# ພຣະທຳປາກົດໃນຮ່າງກາຍ

ເຫຼັ້ມທີ 1

## ການປາກົດຕົວ
## ແລະ ພາລະກິດຂອງພຣະເຈົ້າ

ຄຣິສຕະຈັກຂອງ
ພຣະເຈົ້າອົງຊົງລິດທານຸພາບສູງສຸດ

ສະຫງວນລິຂະສິດ © 2023 The Church of Almighty God

# ພຣະທຳປາກົດໃນຮ່າງກາຍ

### ເຫຼັ້ມທີ I

## ການປາກົດຕົວ ແລະ ພາລະກິດຂອງພຣະເຈົ້າ

ພຣະທຳປາກົດໃນຮ່າງກາຍ (ເຊິ່ງເອີ້ນຫຍໍ້ວ່າ ພຣະທຳ) ທີ່ກ່າວໂດຍພຣະຄຣິດແຫ່ງຍຸກສຸດທ້າຍນັ້ນກໍຄື ພຣະເຈົ້າອົງຊົງລິດທານຸພາບສູງສຸດ ແມ່ນປະກອບດ້ວຍຫົກເຫຼັ້ມໃນປັດຈຸບັນ: ເຫຼັ້ມທີ ໜຶ່ງ, ການປາກົດຕົວ ແລະ ພາລະກິດຂອງພຣະເຈົ້າ; ເຫຼັ້ມທີ ສອງ, ກ່ຽວກັບການຮູ້ຈັກພຣະເຈົ້າ; ເຫຼັ້ມທີ ສາມ, ບົດບັນທຶກການສົນທະນາຂອງພຣະຄຣິດແຫ່ງຍຸກສຸດທ້າຍ; ເຫຼັ້ມທີ ສີ່, ການເປີດໂປງຜູ້ຕໍ່ຕ້ານພຣະຄຣິດ; ເຫຼັ້ມທີ ຫ້າ, ຄວາມຮັບຜິດຊອບຂອງຜູ້ນໍາ ແລະ ຜູ້ເຮັດວຽກ; ແລະ ເຫຼັ້ມທີ ຫົກ, ກ່ຽວກັບການສະແຫວງຫາຄວາມຈິງ.

ສະຫງວນລິຂະສິດ. ສ່ວນໃດໜຶ່ງໃນໜັງສືເຫຼັ້ມນີ້ບໍ່ສາມາດຖືກນໍາໄປຜະລິດຄືນໃໝ່ ຫຼື ຖ່າຍໂອນໃນຮູບແບບໃດໜຶ່ງ ຫຼື ໂດຍວິທີການໃດໜຶ່ງ, ທາງອີເລັກໂທຣນິກ ຫຼື ທາງເຄື່ອງຈັກ ເຊິ່ງລວມເຖິງການຖ່າຍສຳເນົາເອກະສານ, ການບັນທຶກ ຫຼື ການຈັດເກັບຂໍ້ມູນ ຫຼື ການກູ້ຄືນໂດຍລະບົບ ໂດຍບໍ່ມີການອະນຸຍາດທີ່ເປັນລາຍລັກອັກສອນຢ່າງຈະແຈ້ງຈາກເຈົ້າຂອງລິຂະສິດ.

ການຂໍຂໍ້ມູນຄວນສົ່ງໄປຫາ:
contact.lo@kingdomsalvation.org

ເນື້ອໃນທັງໝົດຂອງໜັງສືເຫຼັ້ມນີ້ແມ່ນໄດ້ຮັບການແປ ແລະ ກວດແກ້ໂດຍນັກແປພາສາມືອາຊີບ. ຢ່າງໃດກໍຕາມ ຄວາມບໍ່ຖືກຕ້ອງຈຳນວນເລັກນ້ອຍອາດຍັງມີຢູ່. ຖ້າທ່ານສົງໄສວ່າມີຄວາມບໍ່ຖືກຕ້ອງດັ່ງກ່າວ ກະລຸນາຖືເອົາຕົ້ນສະບັບທີ່ເປັນພາສາຈີນເປັນບ່ອນອ້າງອີງ. ພ້ອມນີ້ ກະລຸນາຕິດຕໍ່ຫາພວກເຮົາເພື່ອແຈ້ງໃຫ້ພວກເຮົາຊາບ ເພື່ອຈະໄດ້ປັບປຸງໜັງສືເຫຼັ້ມນີ້ເມື່ອມີການຈັດພິມຄືນໃໝ່.

ເຜີຍແຜ່ໂດຍ ຄຣິສຕະຈັກຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ
https://lo.godfootsteps.org

# ຄຳນຳ

ເຖິງແມ່ນວ່າມີຫຼາຍຄົນເຊື່ອໃນພຣະເຈົ້າ, ມີໜ້ອຍຄົນທີ່ເຂົ້າໃຈຄວາມໝາຍຂອງຄວາມເຊື່ອໃນພຣະເຈົ້າ ແລະ ສິ່ງທີ່ພວກເຂົາຕ້ອງປະຕິບັດເພື່ອໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ນີ້ກໍຍ້ອນວ່າ ເຖິງພວກເຂົາຈະລຶ້ງເຄີຍກັບຄຳວ່າ "ພຣະເຈົ້າ" ແລະ ວະລີ ເຊັ່ນ: "ພາລະກິດຂອງພຣະເຈົ້າ" ພວກເຂົາກໍບໍ່ຮູ້ຈັກພຣະເຈົ້າ ແລ້ວແຮງໄກທີ່ພວກເຂົາຈະຮູ້ຈັກພາລະກິດຂອງພຣະອົງ. ດັ່ງນັ້ນ ບໍ່ແປກໃຈເລີຍທີ່ທຸກຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພຣະເຈົ້າພາກັນສັບສົນໃນຄວາມເຊື່ອຂອງພວກເຂົາກ່ຽວກັບພຣະເຈົ້າ. ຜູ້ຄົນບໍ່ຈິງຈັງກັບຄວາມເຊື່ອໃນພຣະເຈົ້າ ແລະ ທັງໝົດນີ້ກໍຍ້ອນວ່າ ການເຊື່ອໃນພຣະເຈົ້າເປັນສິ່ງທີ່ບໍ່ຄຸ້ນເຄີຍເກີນໄປ ແລະ ແປກປະຫຼາດເກີນໄປສຳລັບພວກເຂົາ. ໃນລັກສະນະນີ້ ພວກເຂົາຈຶ່ງຂາດຄຸນສົມບັດທີ່ພຣະເຈົ້າຕ້ອງການ. ເວົ້າອີກຢ່າງໜຶ່ງກໍຄື ຖ້າຜູ້ຄົນບໍ່ຮູ້ຈັກພຣະເຈົ້າ ແລະ ບໍ່ຮູ້ຈັກພາລະກິດຂອງພຣະອົງ ແລ້ວພວກເຂົາກໍບໍ່ເໝາະສົມທີ່ຈະໃຫ້ພຣະເຈົ້າໃຊ້ ແລະ ແຮງໄກທີ່ພວກເຂົາຈະສາມາດບັນລຸຕາມຄວາມປະສົງຂອງພຣະອົງໄດ້. "ຄວາມເຊື່ອໃນພຣະເຈົ້າ" ໝາຍເຖິງການເຊື່ອວ່າມີພຣະເຈົ້າ; ນີ້ແມ່ນຄວາມຄິດກ່ຽວກັບການເຊື່ອພຣະເຈົ້າແບບທຳມະດາທີ່ສຸດ. ອີກຢ່າງ ການເຊື່ອວ່າມີພຣະເຈົ້າບໍ່ຄືກັບການເຊື່ອໃນພຣະເຈົ້າຢ່າງແທ້ຈິງ; ກົງກັນຂ້າມ ມັນເປັນຄວາມເຊື່ອແບບທຳມະດາທີ່ເໜັ້ນໜັກໃສ່ທາງດ້ານສາສະໜາ. ຄວາມເຊື່ອທີ່ແທ້ຈິງໃນພຣະເຈົ້າໝາຍເຖິງສິ່ງດັ່ງຕໍ່ໄປນີ້: ບົນພື້ນຖານຂອງຄວາມເຊື່ອທີ່ວ່າພຣະເຈົ້າປົກຄອງສັບພະສິ່ງທັງປວງ, ຄົນໃດໜຶ່ງຕ້ອງຜະເຊີນກັບພຣະທຳຂອງພຣະອົງ ແລະ ພາລະກິດຂອງພຣະອົງ, ລົບລ້າງອຸປະນິໄສທີ່ເສື່ອມຊາມຂອງຕົນເອງ, ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ມາຮູ້ຈັກພຣະເຈົ້າ. ມີພຽງແຕ່ການເດີນທາງແບບນີ້ເທົ່ານັ້ນ ຈຶ່ງຈະສາມາດເອີ້ນໄດ້ວ່າ "ຄວາມເຊື່ອໃນພຣະເຈົ້າ". ແຕ່ເຖິງຢ່າງນັ້ນກໍຕາມ ຜູ້ຄົນມັກຈະເຫັນຄວາມເຊື່ອໃນພຣະເຈົ້າເປັນເລື່ອງທຳມະດາ ແລະ ບໍ່ສຳຄັນ. ຜູ້ຄົນທີ່ເຊື່ອໃນພຣະເຈົ້າໃນລັກສະນະນີ້ແມ່ນໄດ້ສູນເສຍຄວາມໝາຍຂອງການເຊື່ອໃນພຣະເຈົ້າ ແລະ ເຖິງແມ່ນວ່າ ພວກເຂົາອາດສືບຕໍ່ເຊື່ອຈົນເຖິງທີ່ສຸດ, ພວກເຂົາກໍຈະບໍ່ໄດ້ຮັບການເຫັນດີຈາກພຣະເຈົ້າ, ນັ້ນກໍຍ້ອນວ່າ ພວກເຂົາຍ່າງໃນເສັ້ນທາງທີ່ຜິດ. ປັດຈຸບັນນີ້, ຍັງມີຜູ້ຄົນທີ່ເຊື່ອໃນພຣະເຈົ້າຕາມຕົວໜັງສື ແລະ ໃນທິດສະດີທີ່ວ່າງເປົ່າ. ພວກເຂົາບໍ່ຮູ້ວ່າ ພວກເຂົາຂາດແກ່ນແທ້ແຫ່ງຄວາມເຊື່ອໃນພຣະເຈົ້າ ແລະ ພວກເຂົາບໍ່ສາມາດໄດ້ຮັບຄວາມເຫັນດີຈາກພຣະເຈົ້າ. ແຕ່ພວກເຂົາກໍຍັງອະທິຖານຂໍພອນເພື່ອຄວາມປອດໄພ ແລະ ຄວາມກະລຸນາຢ່າງພຽງພໍຈາກພຣະເຈົ້າ. ໃຫ້ພວກເຮົາຢຸດ, ເຮັດໃຫ້ຫົວໃຈຂອງພວກເຮົາສະຫງົບ ແລະ ຖາມຕົນເອງວ່າ: ມັນເປັນໄປໄດ້ບໍວ່າ ການເຊື່ອໃນພຣະເຈົ້າເປັນເລື່ອງທີ່ງ່າຍທີ່ສຸດແທ້ໃນໂລກນີ້? ມັນເປັນໄປໄດ້ບໍວ່າ ການເຊື່ອໃນພຣະເຈົ້າບໍ່ມີຄວາມໝາຍຫຍັງນອກຈາກເປັນການຮັບເອົາຄວາມກະລຸນາຢ່າງໃຫຍ່ຫຼວງຈາກພຣະເຈົ້າ? ຜູ້ຄົນທີ່ເຊື່ອໃນພຣະເຈົ້າ ແຕ່ບໍ່ຮູ້ຈັກພຣະອົງ ຫຼື ເຊື່ອໃນພຣະອົງ ແຕ່ຕໍ່ຕ້ານພຣະອົງ ຈະສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້ແທ້ບໍ?

ພຣະເຈົ້າ ແລະ ມະນຸດບໍ່ສາມາດເວົ້າເຖິງໃນຮູບແບບເທົ່າທຽມກັນໄດ້. ແກ່ນແທ້ຂອງພຣະອົງ ແລະ ພາລະກິດຂອງພຣະອົງແມ່ນບໍ່ສາມາດຢັ່ງເຖິງໄດ້ທີ່ສຸດ ແລະ ຍາກທີ່ມະນຸດຈະເຂົ້າໃຈ. ຖ້າພຣະເຈົ້າ

ບໍ່ປະຕິບັດພາລະກິດຂອງພຣະອົງ ແລະ ກ່າວພຣະທຳໃນໂລກມະນຸດນີ້ດ້ວຍຕົວພຣະອົງເອງ, ແລ້ວມະນຸດກໍຈະບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້. ສະນັ້ນ ແມ່ນແຕ່ຜູ້ທີ່ອຸທິດຊີວິດທັງໝົດຂອງພວກເຂົາໃຫ້ກັບພຣະເຈົ້າກໍຈະບໍ່ສາມາດໄດ້ຮັບຄວາມເຫັນດີຈາກພຣະອົງໄດ້. ຖ້າພຣະເຈົ້າບໍ່ເລີ່ມປະຕິບັດພາລະກິດຢ່າງໜັກ, ແລ້ວບໍ່ວ່າມະນຸດຈະເຮັດດີປານໃດກໍຕາມ ມັນກໍຈະບໍ່ມີຄວາມໝາຍຫຍັງ ເພາະວ່າ ແນວຄວາມຄິດຂອງພຣະເຈົ້າຈະສູງສົ່ງກວ່າແນວຄວາມຄິດຂອງມະນຸດສະເໝີ ແລະ ສະຕິປັນຍາຂອງພຣະເຈົ້າເປັນສິ່ງທີ່ຢູ່ນອກເໜືອຄວາມເຂົ້າໃຈຂອງມະນຸດ. ດັ່ງນັ້ນ ເຮົາຈຶ່ງເວົ້າວ່າຜູ້ຄົນເຫຼົ່ານັ້ນທີ່ອ້າງວ່າ "ເຂົ້າໃຈຢ່າງເຕັມປ່ຽມ" ໃນພຣະເຈົ້າ ແລະ ພາລະກິດຂອງພຣະອົງເປັນກຸ່ມຄົນທີ່ເຊື່ອຊ້າ; ພວກເຂົາທຸກຄົນອວດດີ ແລະ ບໍ່ມີຄວາມຮູ້ຫຍັງ. ມະນຸດບໍ່ຄວນຕີຄວາມໝາຍພາລະກິດຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ມະນຸດບໍ່ສາມາດຕີຄວາມໝາຍພາລະກິດຂອງພຣະເຈົ້າ. ໃນສາຍຕາຂອງພຣະເຈົ້າ ມະນຸດແມ່ນບໍ່ມີຄວາມໝາຍສຳລັບໂຕມົດ, ສະນັ້ນ ມະນຸດຈະສາມາດເຂົ້າໃຈພາລະກິດຂອງພຣະເຈົ້າໄດ້ແນວໃດ? ຜູ້ທີ່ມັກເວົ້າວ່າ: "ພຣະເຈົ້າບໍ່ໄດ້ເຮັດແບບນີ້ ຫຼື ແບບນັ້ນ" ຫຼື "ພຣະເຈົ້າເປັນແບບນີ້ ຫຼື ແບບນັ້ນ" ພວກເຂົາເຫຼົ່ານີ້ບໍ່ເວົ້າຢ່າງໂອຫັງບໍ? ພວກເຮົາທຸກຄົນຄວນຮູ້ວ່າ ມະນຸດທີ່ມາຈາກເນື້ອໜັງແມ່ນລ້ວນແຕ່ຖືກເສື່ອມຊາມໂດຍຊາຕານ. ທຳມະຊາດແທ້ຂອງມະນຸດຊາດແມ່ນການຕໍ່ຕ້ານພຣະເຈົ້າ. ມະນຸດຊາດບໍ່ໄດ້ຢູ່ໃນລະດັບເທົ່າທຽມກັບພຣະເຈົ້າ, ແຮງໄກທີ່ມະນຸດຊາດຈະຫວັງສາມາດແນະນຳພາລະກິດຂອງພຣະເຈົ້າໄດ້. ແຕ່ສຳລັບວິທີທີ່ພຣະເຈົ້ານຳພາມະນຸດ, ນີ້ແມ່ນພາລະກິດຂອງພຣະເຈົ້າເອງ. ມັນເປັນເລື່ອງເໝາະສົມທີ່ມະນຸດຄວນຍອມຮັບ ໂດຍບໍ່ອ້າງມຸມມອງນີ້ ຫຼື ນັ້ນ, ເພາະວ່າ ມະນຸດເປັນພຽງຂີ້ຝຸ່ນ. ໃນເມື່ອມັນຄືເຈດຕະນາຂອງພວກເຮົາທີ່ຈະສະແຫວງຫາພຣະເຈົ້າ ພວກເຮົາບໍ່ຄວນນຳເອົາແນວຄິດຂອງພວກເຮົາທີ່ມີຕໍ່ພາລະກິດຂອງພຣະອົງມາໃຫ້ພຣະເຈົ້າພິຈາລະນາ, ແຮງໄກທີ່ພວກເຮົາຄວນນຳໃຊ້ອຸປະນິໄສອັນເສື່ອມຊາມທີ່ສຸດຂອງພວກເຮົາເພື່ອຈົງໃຈຄັດຄ້ານພາລະກິດຂອງພຣະເຈົ້າ. ນັ້ນບໍ່ແມ່ນເປັນການເຮັດໃຫ້ພວກເຮົາເປັນຜູ້ຕໍ່ຕ້ານພຣະຄຣິດບໍ? ຜູ້ຄົນເຫຼົ່ານັ້ນຈະເຊື່ອໃນພຣະເຈົ້າໄດ້ແນວໃດ? ໃນເມື່ອພວກເຮົາເຊື່ອວ່າມີພຣະເຈົ້າ ແລະ ໃນເມື່ອພວກເຮົາຕ້ອງການເຮັດໃຫ້ພຣະອົງພໍໃຈ ແລະ ຕ້ອງການເຫັນພຣະອົງ, ພວກເຮົາຄວນສະແຫວງຫາເສັ້ນທາງແຫ່ງຄວາມຈິງ ແລະ ຄວນຊອກຫາວິທີທີ່ຈະເຂົ້າກັບພຣະເຈົ້າໄດ້. ພວກເຮົາບໍ່ຄວນຢືນຄໍແຂງກະດ້າງໃນການຕໍ່ຕ້ານພຣະເຈົ້າ. ແລ້ວການເຮັດແບບນັ້ນຈະໄດ້ຮັບຜົນປະໂຫຍດຫຍັງ?

ປັດຈຸບັນນີ້, ພຣະເຈົ້າໄດ້ປະຕິບັດພາລະກິດໃໝ່. ເຈົ້າອາດຈະບໍ່ສາມາດຍອມຮັບເອົາພຣະທຳເຫຼົ່ານີ້ ແລະ ພຣະທຳເຫຼົ່ານີ້ອາດເບິ່ງຄືແປກປະຫຼາດສຳລັບເຈົ້າ, ແຕ່ເຮົາຂໍແນະນຳເຈົ້າບໍ່ໃຫ້ເປີດເຜີຍຄວາມເປັນທຳມະຊາດຂອງເຈົ້າ ເພາະວ່າ ມີພຽງຜູ້ຄົນທີ່ຫິວ ແລະ ກະຫາຍຄວາມຊອບທຳຕໍ່ໜ້າພຣະເຈົ້າຢ່າງແທ້ຈິງເທົ່ານັ້ນທີ່ຈະໄດ້ຮັບຄວາມຈິງ ແລະ ມີພຽງຜູ້ທີ່ອຸທິດຕົນຢ່າງແທ້ຈິງເທົ່ານັ້ນຈຶ່ງຈະໄດ້ຮັບຄວາມສະຫວ່າງ ແລະ ການຊີ້ນຳໂດຍພຣະເຈົ້າ. ຜົນໄດ້ຮັບແມ່ນໄດ້ມາຈາກການສະແຫວງຫາຄວາມຈິງດ້ວຍຄວາມສັນຕິ, ບໍ່ແມ່ນດ້ວຍການຂັດແຍ້ງ ແລະ ການໂຕ້ຖຽງກັນ. ເມື່ອເຮົາເວົ້າວ່າ: "ມື້ນີ້ພຣະເຈົ້າມີພາລະກິດໃໝ່", ເຮົາໝາຍເຖິງເລື່ອງທີ່ພຣະເຈົ້າສະເດັດກັບມາສູ່ເນື້ອໜັງ. ບາງເທື່ອ ເຈົ້າບໍ່

ສົນໃຈພຣະທຳເຫຼົ່ານີ້, ບາງເທື່ອເຈົ້າກຽດຊັງພຣະທຳເຫຼົ່ານີ້ ຫຼື ບາງເທື່ອ ພຣະທຳເຫຼົ່ານີ້ເປັນສິ່ງທີ່ໜ້າສົນໃຈຫຼາຍສຳລັບເຈົ້າ. ບໍ່ວ່າໃນກໍລະນີໃດກໍຕາມ, ເຮົາຫວັງວ່າ ທຸກຄົນທີ່ປາຖະໜາການປາກົດຕົວຂອງພຣະເຈົ້າຢ່າງແທ້ຈິງ ຈະສາມາດຜະເຊີນກັບຄວາມເປັນຈິງນີ້ ແລະ ຮັບເອົາຄວາມຈິງນີ້ໄປພິຈາລະນາຢ່າງລະມັດລະວັງ, ແທນທີ່ຈະດ່ວນສະຫຼຸບກ່ຽວກັບມັນ; ນັ້ນແມ່ນສິ່ງທີ່ຄົນມີສະຕິປັນຍາຄວນປະຕິບັດ.

ມັນບໍ່ຍາກທີ່ຈະສອບຖາມໃນສິ່ງດັ່ງກ່າວ, ແຕ່ມັນຮຽກຮ້ອງໃຫ້ພວກເຮົາແຕ່ລະຄົນຮູ້ຈັກຄວາມຈິງນີ້: ພຣະອົງ ຜູ້ທີ່ບັງເກີດເປັນມະນຸດຈະມີແກ່ນແທ້ຂອງພຣະເຈົ້າ ແລະ ພຣະອົງ ຜູ້ທີ່ບັງເກີດເປັນມະນຸດຈະມີຖ້ອຍຄຳຂອງພຣະເຈົ້າ. ຍ້ອນພຣະເຈົ້າກາຍເປັນເນື້ອໜັງ, ພຣະອົງຈະເຮັດໃຫ້ພາລະກິດທີ່ພຣະອົງມີເຈດຕະນາປະຕິບັດນັ້ນສຳເລັດ ແລະ ຍ້ອນວ່າພຣະເຈົ້າກາຍເປັນເນື້ອໜັງ, ພຣະອົງຈະສະແດງເຖິງສິ່ງທີ່ພຣະອົງເປັນ ແລະ ຈະສາມາດນຳເອົາຄວາມຈິງມາສູ່ມະນຸດ, ປະທານຊີວິດໃຫ້ແກ່ເຂົາ ແລະ ຊີ້ເສັ້ນທາງໃຫ້ກັບເຂົາ. ເນື້ອໜັງທີ່ບໍ່ມີແກ່ນແທ້ຂອງພຣະເຈົ້າບໍ່ແມ່ນພຣະເຈົ້າຜູ້ບັງເກີດເປັນມະນຸດຢ່າງແນ່ນອນ; ເລື່ອງນີ້ແມ່ນບໍ່ຕ້ອງສົງໄສເລີຍ. ຖ້າມະນຸດເຈດຕະນາທີ່ຈະສອບຖາມວ່ານັ້ນແມ່ນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ຫຼື ບໍ່, ແລ້ວເຂົາກໍຕ້ອງຫາຫຼັກຖານມາຢືນຢັນຈາກອຸປະນິໄສທີ່ພຣະອົງສະແດງອອກ ແລະ ພຣະທຳທີ່ພຣະອົງກ່າວ. ນັ້ນໝາຍຄວາມວ່າ, ເພື່ອຫາຫຼັກຖານມາຢືນຢັນວ່ານັ້ນແມ່ນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ຫຼື ບໍ່ ແລະ ມັນແມ່ນເສັ້ນທາງທີ່ແທ້ຈິງ ຫຼື ບໍ່ນັ້ນ, ຜູ້ຄົນຕ້ອງແຍກແຍະບົນພື້ນຖານແກ່ນແທ້ຂອງພຣະອົງ. ດັ່ງນັ້ນ, ໃນການຕັດສິນວ່ານັ້ນເປັນເນື້ອໜັງຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ຫຼື ບໍ່, ຈຸດສຳຄັນແມ່ນນອນຢູ່ໃນແກ່ນແທ້ຂອງພຣະອົງ (ພາລະກິດຂອງພຣະອົງ, ພຣະທຳຂອງພຣະອົງ, ອຸປະນິໄສຂອງພຣະອົງ ແລະ ລັກສະນະອື່ນໆ), ແທນທີ່ຈະເປັນລັກສະນະພາຍນອກ. ຖ້າມະນຸດພິຈາລະນາແຕ່ພຽງລັກສະນະພາຍນອກຂອງພຣະອົງ, ຜົນໄດ້ຮັບກໍຄື ການເບິ່ງຂ້າມແກ່ນແທ້ຂອງພຣະອົງ. ແລ້ວນີ້ກໍສະແດງວ່າມະນຸດໂງ່ຈ້າ ແລະ ຂາດຄວາມຮູ້. ລັກສະນະພາຍນອກບໍ່ໄດ້ບົ່ງບອກເຖິງແກ່ນແທ້, ຍິ່ງໄປກວ່ານັ້ນ ພາລະກິດຂອງພຣະເຈົ້າບໍ່ມີທາງສອດຄ່ອງກັບແນວຄວາມຄິດຂອງມະນຸດໄດ້. ລັກສະນະພາຍນອກຂອງພຣະເຢຊູບໍ່ໄດ້ກົງກັນຂ້າມກັບແນວຄິດຂອງມະນຸດບໍ? ໃບໜ້າ ແລະ ການນຸ່ງຫົ່ມຂອງພຣະອົງບໍ່ສາມາດບົ່ງບອກເຖິງຕົວຕົນແທ້ຈິງຂອງພຣະອົງບໍ? ພວກຟາຣີຊາຍໃນຊ່ວງທຳອິດທີ່ຕໍ່ຕ້ານພຣະເຢຊູບໍ່ແມ່ນຍ້ອນພວກເຂົາພຽງແຕ່ເບິ່ງຮູບລັກສະນະພາຍນອກຂອງພຣະອົງ ແລະ ບໍ່ໄດ້ໃສ່ໃຈພຣະທຳທີ່ຢູ່ໃນປາກຂອງພຣະອົງບໍ? ເຮົາຫວັງວ່າ ອ້າຍເອື້ອຍນ້ອງທຸກຄົນທີ່ສະແຫວງຫາລັກສະນະຂອງພຣະເຈົ້າຈະບໍ່ເຮັດຊ້ຳຮອຍຕາມປະຫວັດສາດອັນໂສກເສົ້ານັ້ນອີກ. ພວກເຈົ້າຕ້ອງບໍ່ກາຍເປັນພວກຟາຣີຊາຍແຫ່ງຍຸກສະໄໝໃໝ່ ແລະ ຄຶງພຣະເຈົ້າໃສ່ໄມ້ກາງແຂນອີກຄັ້ງ. ພວກເຈົ້າຄວນພິຈາລະນາຢ່າງຮອບຄອບກ່ຽວກັບວິທີຕ້ອນຮັບການສະເດັດກັບມາຂອງພຣະເຈົ້າ ແລະ ພວກເຈົ້າຄວນມີແນວຄິດຢ່າງຈະແຈ້ງກ່ຽວກັບວິທີທີ່ຈະເປັນຄົນຍອມຮັບຕໍ່ຄວາມຈິງ. ນີ້ແມ່ນຄວາມຮັບຜິດຊອບຂອງທຸກຄົນທີ່ກຳລັງລໍຖ້າໃຫ້ພຣະເຢຊູສະເດັດກັບມາເທິງກ້ອນເມກ. ພວກເຮົາຄວນສີຕາຝ່າຍວິນຍານຂອງເຮົາເພື່ອເຮັດໃຫ້ມັນເຫັນແຈ້ງ ແລະ

ບໍ່ຈົມຢູ່ກັບຖ້ອຍຄຳແຫ່ງການເພີ້ຝັນທີ່ເກີນຈິງ. ພວກເຮົາຄວນຄິດກ່ຽວກັບພາລະກິດຕົວຈິງຂອງພຣະເຈົ້າ ແລະ ເບິ່ງໃນດ້ານທີ່ເປັນຈິງຂອງພຣະເຈົ້າ. ຈົ່ງຢ່າໄດ້ຫຼົງໄຫຼ ຫຼື ສູນເສຍຕົນເອງໃນຄວາມຝັນກາງເວັນ, ໃຫ້ປາຖະໜາຫາມື້ທີ່ພຣະເຢຊູເຈົ້າຈະລົງມາທ່າມກາງພວກເຈົ້າຢ່າງກະທັນຫັນ ໂດຍຂີ່ເທິງກ້ອນເມກ ແລະ ຮັບເອົາພວກເຈົ້າ ຜູ້ທີ່ບໍ່ເຄີຍຮູ້ຈັກ ຫຼື ເຫັນພຣະອົງ ແລະ ຜູ້ທີ່ບໍ່ຮູ້ຈັກວິທີປະຕິບັດຕາມຄວາມປະສົງຂອງພຣະອົງ. ທາງທີ່ດີຄວນຄິດໃສ່ໃນສິ່ງທີ່ມີຄວາມເປັນຈິງຫຼາຍຂຶ້ນ!

ເຈົ້າອາດໄດ້ເປີດປຶ້ມເຫຼັ້ມນີ້ເພື່ອຈຸດປະສົງໃນການຄົ້ນຄວ້າ ຫຼື ດ້ວຍເຈດຕະນາທີ່ຈະຍອມຮັບ; ບໍ່ວ່າທ່າທີຂອງເຈົ້າຈະແມ່ນຫຍັງກໍຕາມ, ເຮົາຫວັງວ່າ ເຈົ້າຈະອ່ານໃຫ້ຈົບ ແລະ ຈະບໍ່ປະວາງມັນຢ່າງງ່າຍດາຍ. ບາງເທື່ອ ຫຼັງຈາກທີ່ໄດ້ອ່ານພຣະທຳເຫຼົ່ານີ້ແລ້ວ ທັດສະນະຄະຕິຂອງເຈົ້າຈະປ່ຽນແປງ, ແຕ່ນັ້ນແມ່ນຂຶ້ນຢູ່ກັບແຮງຈູງໃຈຂອງເຈົ້າ ແລະ ລະດັບຄວາມເຂົ້າໃຈຂອງເຈົ້າ. ເຖິງຢ່າງໃດກໍຕາມ ມີສິ່ງໜຶ່ງທີ່ເຈົ້າຄວນຮູ້: ພຣະທຳຂອງພຣະເຈົ້າບໍ່ສາມາດກ່າວໄດ້ວ່າ ເປັນຄຳເວົ້າຂອງມະນຸດ ແລະ ແຮງໄກທີ່ຄົນໃດໜຶ່ງຈະສາມາດເຮັດໃຫ້ຄຳເວົ້າຂອງມະນຸດເປັນພຣະທຳຂອງພຣະເຈົ້າ. ມະນຸດຄົນໃດກໍຕາມທີ່ຖືກໃຊ້ໂດຍພຣະເຈົ້າຈະບໍ່ແມ່ນພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ພຣະເຈົ້າທີ່ບັງເກີດເປັນມະນຸດກໍບໍ່ແມ່ນມະນຸດທີ່ຖືກໃຊ້ໂດຍພຣະເຈົ້າ. ໃນສິ່ງນີ້ແມ່ນມີຄວາມແຕກຕ່າງທີ່ສຳຄັນ. ບາງເທື່ອ ຫຼັງຈາກອ່ານພຣະທຳເຫຼົ່ານີ້ແລ້ວ ເຈົ້າບໍ່ຍອມຮັບວ່າສິ່ງເຫຼົ່ານີ້ຄືພຣະທຳຂອງພຣະເຈົ້າ, ແຕ່ເປັນພຽງແສງສະຫວ່າງທີ່ມະນຸດໄດ້ຮັບ. ໃນກໍລະນີນີ້ ເຈົ້າກໍຕາບອດດ້ວຍຄວາມບໍ່ຮູ້. ພຣະທຳຂອງພຣະເຈົ້າຈະຄືກັນກັບແສງສະຫວ່າງທີ່ມະນຸດໄດ້ຮັບແນວໃດ? ພຣະທຳຂອງພຣະເຈົ້າຜູ້ບັງເກີດເປັນມະນຸດໄດ້ລິເລີ່ມຍຸກໃໝ່, ຊີ້ນຳມວນມະນຸດຊາດ, ເປີດເຜີຍຄວາມເລິກລັບ ແລະ ສະແດງໃຫ້ມະນຸດເຫັນທິດທາງທີ່ເຂົາຕ້ອງຮັບເອົາໃນຍຸກໃໝ່. ແສງສະຫວ່າງທີ່ໄດ້ຮັບໂດຍມະນຸດແມ່ນເປັນພຽງຄຳແນະນຳສຳລັບການປະຕິບັດ ຫຼື ຄວາມຮູ້ທີ່ທຳມະດາ. ມັນບໍ່ສາມາດນຳພາມວນມະນຸດຊາດໄປສູ່ຍຸກໃໝ່ໄດ້ ຫຼື ເປີດເຜີຍຄວາມເລິກລັບຂອງພຣະເຈົ້າເອງໄດ້. ເມື່ອທຸກຢ່າງຈົບສິ້ນລົງ, ພຣະເຈົ້າກໍຄືພຣະເຈົ້າ ແລະ ມະນຸດກໍຄືມະນຸດ. ພຣະເຈົ້າມີແກ່ນແທ້ຂອງພຣະເຈົ້າ ແລະ ມະນຸດກໍມີແກ່ນແທ້ຂອງມະນຸດ. ຖ້າມະນຸດເຫັນພຣະທຳທີ່ກ່າວໂດຍພຣະເຈົ້າເປັນພຽງຄວາມສະຫວ່າງທຳມະດາຂອງພຣະວິນຍານບໍລິສຸດ ແລະ ຖືເອົາຖ້ອຍຄຳຂອງພວກອັກຄະສາວົກ ແລະ ຜູ້ປະກາດພຣະທຳເປັນພຣະທຳທີ່ກ່າວໂດຍພຣະເຈົ້າເອງ, ນັ້ນຈະເປັນຄວາມຜິດພາດຂອງມະນຸດ. ຢ່າງໃດກໍຕາມ, ເຈົ້າບໍ່ຄວນປະສົມຄວາມຖືກຕ້ອງ ແລະ ຄວາມຜິດ ຫຼື ເຮັດໃຫ້ສູງກາຍເປັນຕໍ່າ ຫຼື ເຂົ້າໃຈຜິດວ່າສິ່ງທີ່ເລິກເຊິ່ງເປັນສິ່ງທີ່ຕື້ນ; ເຖິງຢ່າງໃດກໍຕາມ, ເຈົ້າບໍ່ຄວນຈິງໃຈໂຕ້ແຍ້ງສິ່ງທີ່ເຈົ້າຮູ້ໃຫ້ກາຍເປັນຄວາມຈິງ. ທຸກຄົນທີ່ເຊື່ອວ່າມີພຣະເຈົ້າກໍຄວນຄົ້ນຫາບັນຫາຈາກມຸມມອງທີ່ຖືກຕ້ອງ ແລະ ຄວນຮັບເອົາພາລະກິດໃໝ່ຂອງພຣະເຈົ້າ ແລະ ພຣະທຳໃໝ່ຂອງພຣະອົງຈາກທັດສະນະຂອງສິ່ງທີ່ຖືກສ້າງໂດຍພຣະອົງ; ບໍ່ດັ່ງນັ້ນພວກເຂົາກໍຈະຖືກກຳຈັດໂດຍພຣະເຈົ້າ.

ຫຼັງຈາກພາລະກິດຂອງພຣະເຢໂຮວາ, ພຣະເຢຊູໄດ້ກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດ. ພາລະກິດຂອງພຣະອົງບໍ່ໄດ້ດຳເນີນການຢ່າງໂດດດ່ຽວ ແຕ່ຖືກສ້າງຂຶ້ນບົນພາລະກິດຂອງພຣະເຢໂຮວາ. ມັນຄືພາລະກິດສຳລັບຍຸກໃໝ່ທີ່ພຣະເຈົ້າໄດ້ປະຕິບັດ ຫຼັງຈາກທີ່

ພຣະອົງໄດ້ສິ້ນສຸດຍຸກແຫ່ງພຣະບັນຍັດ. ເຊັ່ນດຽວກັນ ຫຼັງຈາກພາລະກິດຂອງພຣະເຢໂຮວາສິ້ນສຸດລົງ, ພຣະເຈົ້າກໍສືບຕໍ່ພາລະກິດຂອງພຣະອົງສຳລັບຍຸກຕໍ່ໄປ ຍ້ອນວ່າການຄຸ້ມຄອງທັງໝົດຂອງພຣະເຈົ້າແມ່ນກ້າວໄປທາງໜ້າຢູ່ເລື້ອຍໆ. ເມື່ອຍຸກເກົ່າຜ່ານໄປ ມັນກໍຈະຖືກແທນທີ່ໂດຍຍຸກໃໝ່ ແລະ ຫຼັງຈາກທີ່ພາລະກິດເກົ່າໄດ້ສຳເລັດລົງ ກໍຈະມີພາລະກິດໃໝ່ເພື່ອສືບຕໍ່ການຄຸ້ມຄອງຂອງພຣະເຈົ້າ. ການບັງເກີດເປັນມະນຸດໃນຄັ້ງນີ້ແມ່ນການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າ ຫຼັງຈາກພາລະກິດຂອງພຣະເຢຊູ. ແນ່ນອນ ການບັງເກີດເປັນມະນຸດໃນຄັ້ງນີ້ບໍ່ໄດ້ເກີດຂຶ້ນດ້ວຍຕົນເອງ; ມັນເປັນຂັ້ນຕອນທີສາມຂອງພາລະກິດຫຼັງຈາກຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນ. ແຕ່ລະຄັ້ງທີ່ພຣະເຈົ້າເລີ່ມຕົ້ນຂັ້ນຕອນໃໝ່ຂອງພາລະກິດ, ມັນກໍຕ້ອງມີການເລີ່ມຕົ້ນໃໝ່ ແລະ ມັນຕ້ອງນຳຍຸກໃໝ່ມາຢູ່ສະເໝີ. ພ້ອມນີ້ ກໍຈະມີການປ່ຽນແປງທີ່ກ່ຽວຂ້ອງກັບອຸປະນິໄສຂອງພຣະເຈົ້າ, ປ່ຽນແປງລັກສະນະແຫ່ງການປະຕິບັດພາລະກິດຂອງພຣະອົງ, ສະຖານທີ່ຂອງພາລະກິດຂອງພຣະອົງ ແລະ ນາມຂອງພຣະອົງ. ດັ່ງນັ້ນ ບໍ່ແປກໃຈເລີຍ ທີ່ມັນຫຍຸ້ງຍາກສຳລັບມະນຸດທີ່ຈະຍອມຮັບເອົາພາລະກິດຂອງພຣະເຈົ້າໃນຍຸກໃໝ່. ແຕ່ເຖິງແມ່ນວ່າພຣະອົງຈະຖືກມະນຸດຕໍ່ຕ້ານແນວໃດກໍຕາມ, ພຣະເຈົ້າກໍປະຕິບັດພາລະກິດຂອງພຣະອົງຢູ່ສະເໝີ ແລະ ນຳພາມວນມະນຸດຊາດກ້າວໄປຂ້າງໜ້າສະເໝີ. ເມື່ອພຣະເຢຊູສະເດັດມາສູ່ໂລກມະນຸດ, ພຣະອົງໄດ້ເລີ່ມຕົ້ນຍຸກແຫ່ງພຣະຄຸນ ແລະ ສິ້ນສຸດຍຸກແຫ່ງພຣະບັນຍັດ. ໃນລະຫວ່າງຍຸກສຸດທ້າຍນັ້ນ ພຣະເຈົ້າໄດ້ກາຍເປັນເນື້ອໜັງອີກເທື່ອໜຶ່ງ ແລະ ດ້ວຍການບັງເກີດເປັນມະນຸດນີ້ ພຣະເຈົ້າຈຶ່ງໄດ້ສິ້ນສຸດຍຸກແຫ່ງພຣະຄຸນ ແລະ ເລີ່ມຕົ້ນຍຸກແຫ່ງອານາຈັກ. ທຸກຄົນທີ່ສາມາດຮັບເອົາການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າກໍຈະຖືກນຳພາໄປສູ່ຍຸກແຫ່ງອານາຈັກ ແລະ ຍິ່ງໄປກວ່ານັ້ນກໍຈະສາມາດຮັບເອົາການຊີ້ນຳເປັນການສ່ວນຕົວຈາກພຣະເຈົ້າ. ເຖິງແມ່ນວ່າ ພຣະເຢຊູໄດ້ປະຕິບັດພາລະກິດຫຼາຍຢ່າງໃນທ່າມກາງມະນຸດ, ພຣະອົງພຽງສຳເລັດການໄຖ່ບາບຂອງມວນມະນຸດຊາດ ແລະ ກາຍເປັນເຄື່ອງຖວາຍບູຊາແທນຄວາມຜິດບາບຂອງມະນຸດເທົ່ານັ້ນ; ພຣະອົງບໍ່ໄດ້ກຳຈັດອຸປະນິໄສທີ່ເສື່ອມຊາມທັງໝົດຂອງເຂົາອອກຈາກມະນຸດ. ການຊ່ວຍໃຫ້ມະນຸດລອດພົ້ນຢ່າງສົມບູນຈາກອິດທິພົນຂອງຊາຕານບໍ່ແມ່ນພຽງຕ້ອງການໃຫ້ພຣະເຢຊູກາຍເປັນເຄື່ອງຖວາຍບູຊາແທນຄວາມຜິດບາບ ແລະ ແບກຮັບຄວາມຜິດບາບຂອງມະນຸດເທົ່ານັ້ນ, ແຕ່ມັນຍັງຮຽກຮ້ອງໃຫ້ພຣະເຈົ້າປະຕິບັດພາລະກິດທີ່ຍິ່ງໃຫຍ່ຂຶ້ນເພື່ອກຳຈັດອຸປະນິໄສເສື່ອມຊາມຂອງຊາຕານຂອງເຂົາໃຫ້ອອກຈາກມະນຸດ. ດັ່ງນັ້ນ ບັດນີ້ເມື່ອມະນຸດໄດ້ຮັບການໃຫ້ອະໄພຄວາມຜິດບາບຂອງເຂົາ, ພຣະເຈົ້າຈຶ່ງໄດ້ກັບຄືນສູ່ເນື້ອໜັງ ເພື່ອນຳພາມະນຸດໄປສູ່ຍຸກໃໝ່ ແລະ ເລີ່ມຕົ້ນພາລະກິດຂອງການຂ້ຽນຕີ ແລະ ການພິພາກສາ. ພາລະກິດນີ້ໄດ້ນຳພາມະນຸດໄປສູ່ອານາຈັກທີ່ສູງສົ່ງຍິ່ງຂຶ້ນ. ທຸກຄົນທີ່ຍອມຢູ່ພາຍໃຕ້ອຳນາດຂອງພຣະອົງຈະໄດ້ຮັບຄວາມຈິງທີ່ສູງສົ່ງຂຶ້ນ ແລະ ໄດ້ຮັບພອນທີ່ຍິ່ງໃຫຍ່ຂຶ້ນ. ພວກເຂົາຈະດຳລົງຊີວິດຢູ່ໃນແສງສະຫວ່າງຢ່າງແທ້ຈິງ ແລະ ພວກເຂົາຈະໄດ້ຮັບເອົາຄວາມຈິງ, ຫົນທາງ ແລະ ຊີວິດ.

ຖ້າຜູ້ຄົນຍັງຢູ່ໃນຍຸກພຣະຄຸນ ພວກເຂົາຈະບໍ່ຫຼຸດພົ້ນຈາກອຸປະນິໄສທີ່ເສື່ອມຊາມຂອງພວກເຂົາໄດ້ຈັກເທື່ອ, ແຮງໄກທີ່ຈະຮູ້ຈັກອຸປະນິໄສໂດຍກຳເນີດຂອງພຣະເຈົ້າ. ຖ້າຜູ້ຄົນດຳລົງຊີວິດໃນທ່າມກາງ

ຄວາມອຸດົມສົມບູນຂອງຄວາມກະລຸນາຢູ່ສະເໝີ ແຕ່ບໍ່ມີວິທີຊີວິດທີ່ເຮັດໃຫ້ພວກເຂົາຮູ້ຈັກພຣະເຈົ້າ ຫຼື ເປັນທີ່ພໍໃຈຂອງພຣະເຈົ້າ, ແລ້ວພວກເຂົາກໍຈະບໍ່ໄດ້ຮັບພຣະອົງໃນຄວາມເຊື່ອຂອງພວກເຂົາທີ່ມີຕໍ່ພຣະອົງຈັກເທື່ອ. ຄວາມເຊື່ອປະເພດນີ້ເປັນຕາສົມເພດແທ້ໆ. ເມື່ອເຈົ້າໄດ້ອ່ານປຶ້ມເຫຼັ້ມນີ້ສຳເລັດແລ້ວ, ເມື່ອເຈົ້າໄດ້ຜະເຊີນກັບແຕ່ລະບາດກ້າວຂອງພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດໃນຍຸກແຫ່ງອານາຈັກນີ້ແລ້ວ, ເຈົ້າຈະຮູ້ສຶກວ່າ ຄວາມປາຖະໜາທີ່ເຈົ້າມີເປັນເວລາຫຼາຍປີນັ້ນຈະກາຍເປັນຈິງໃນທີ່ສຸດ. ເຈົ້າຈະຮູ້ສຶກວ່າ ມີແຕ່ຕອນນີ້ເທົ່ານັ້ນທີ່ເຈົ້າຈະໄດ້ເຫັນພຣະເຈົ້າເຊິ່ງໜ້າ; ມີແຕ່ຕອນນີ້ເທົ່ານັ້ນທີ່ເຈົ້າຈະໄດ້ແນມເບິ່ງໃບໜ້າພຣະເຈົ້າ, ໄດ້ຍິນພຣະຄຳສ່ວນຕົວຂອງພຣະອົງ, ເຫັນຄຸນຄ່າສະຕິປັນຍາໃນການປະຕິບັດພາລະກິດຂອງພຣະອົງ ແລະ ຮູ້ສຶກຢ່າງແທ້ຈິງວ່າ ພຣະອົງເປັນຈິງ ແລະ ມີລິດທານຸພາບສູງສຸດພຽງໃດ. ເຈົ້າຈະຮູ້ສຶກວ່າ ເຈົ້າໄດ້ຮັບຫຼາຍສິ່ງທີ່ຜູ້ຄົນໃນອະດີດຜ່ານມາບໍ່ເຄີຍເຫັນ ຫຼື ເຄີຍມີ. ໃນເວລານີ້ ເຈົ້າຈະຮູ້ຢ່າງແທ້ຈິງວ່າ ການເຊື່ອໃນພຣະເຈົ້າແມ່ນຫຍັງ ແລະ ການປະຕິບັດຕາມຄວາມປະສົງຂອງພຣະເຈົ້າແມ່ນຫຍັງ. ແນ່ນອນ ຖ້າເຈົ້າຍຶດຕິດກັບມຸມມອງໃນອະດີດ ແລະ ບໍ່ຍອມຮັບ ຫຼື ປະຕິເສດຄວາມຈິງຂອງການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າ, ແລ້ວເຈົ້າກໍຈະຍັງເຫຼືອແຕ່ມືເປົ່າ, ບໍ່ໄດ້ຮັບຫຍັງເລີຍ ແລະ ໃນທີ່ສຸດ ເຈົ້າກໍຈະຖືກພິພາກສາວ່າຜິດໃນກໍລະນີຕໍ່ຕ້ານພຣະເຈົ້າ. ຜູ້ທີ່ສາມາດເຊື່ອຟັງຄວາມຈິງ ແລະ ຍອມຮັບພາລະກິດຂອງພຣະເຈົ້າກໍຈະໄດ້ຮັບການຢືນຢັນພາຍໃຕ້ນາມຂອງພຣະເຈົ້າທີ່ບັງເກີດເປັນມະນຸດຄັ້ງທີສອງ ນັ້ນກໍຄື ອົງຊົງລິດທານຸພາບສູງສຸດ. ພວກເຂົາຈະສາມາດຮັບເອົາການຊີ້ນຳສ່ວນຕົວຈາກພຣະເຈົ້າ, ຈະໄດ້ຮັບຄວາມຈິງຫຼາຍຂຶ້ນ ແລະ ສູງສົ່ງຫຼາຍຍິ່ງຂຶ້ນ ພ້ອມທັງຊີວິດທີ່ແທ້ຈິງ. ພວກເຂົາຈະເຫັນນິມິດທີ່ຜູ້ຄົນໃນອະດີດບໍ່ເຄີຍເຫັນມາກ່ອນ: "ແລະ ຂ້າພະເຈົ້າຫັນໄປຍັງສຽງທີ່ເວົ້າກັບຂ້າພະເຈົ້າ. ເມື່ອຂ້າພະເຈົ້າຫັນໄປກໍເຫັນຄັນທຽນຄຳເຈັດອັນ; ໃນທ່າມກາງຄັນທຽນເຈັດຄັນເຫຼົ່ານັ້ນ ມີຜູ້ໜຶ່ງເໝືອນບຸດມະນຸດ, ນຸ່ງເສື້ອລ່າມລົງເຖິງຕີນ ແລະ ຄຽນເອິກດ້ວຍຜ້າບ່ຽງຄຳ. ຫົວ ແລະ ຜົມຂອງພຣະອົງເປັນສີຂາວເໝືອນຂົນແກະ, ຂາວເໝືອນດັ່ງຫິມະ ແລະ ຕາຂອງພຣະອົງເປັນເໝືອນດັ່ງແປວໄຟ; ຕີນຂອງພຣະອົງເໝືອນດັ່ງທອງຍອດດີທີ່ເບິ່ງຄືກັບວ່າ ຖືກຫຼອມໃນເຕົາໄຟ ແລະ ສຽງຂອງພຣະອົງດັງກ້ອງເໝືອນດັ່ງສຽງນໍ້າໄຫລ. ພຣະອົງຖືດາວເຈັດດວງໃນມືເບື້ອງຂວາຂອງພຣະອົງ ແລະ ໃນປາກຂອງພຣະອົງມີດາບສອງຄົມເດ່ອອກມາ ແລະ ໃບໜ້າຂອງພຣະອົງເປັນເໝືອນດັ່ງຕາເວັນທີ່ສ່ອງແສງຢູ່ໃນລັດສະໝີຂອງພຣະອົງ" (ພຣະນິມິດ 1:12-16). ນິມິດດັ່ງກ່າວນີ້ແມ່ນເປັນການສະແດງເຖິງອຸປະນິໄສທັງໝົດຂອງພຣະເຈົ້າ ແລະ ການສະແດງອອກເຖິງອຸປະນິໄສທັງໝົດຂອງພຣະອົງກໍຍັງເປັນການສະແດງເຖິງພາລະກິດຂອງພຣະເຈົ້າໃນການບັງເກີດເປັນມະນຸດໃນປັດຈຸບັນຂອງພຣະອົງ. ຢູ່ໃນສະພາວະທີ່ຫຼັ່ງໄຫຼແຫ່ງການຂ້ຽນຕີ ແລະ ການພິພາກສາ, ບຸດມະນຸດສະແດງອອກເຖິງອຸປະນິໄສໂດຍທຳມະຊາດຂອງພຣະອົງຜ່ານວິທີການແຫ່ງພຣະຄຳ ເຊິ່ງເຮັດໃຫ້ທຸກຄົນທີ່ຍອມຮັບການຂ້ຽນຕີ ແລະ ການພິພາກສາຂອງພຣະອົງໄດ້ເຫັນໃບໜ້າທີ່ແທ້ຈິງຂອງບຸດມະນຸດ ທີ່ເປັນການພັນລະນາຢ່າງຊື່ສັດເຖິງໃບໜ້າຂອງບຸດມະນຸດທີ່ໂຢຮັນເຄີຍໄດ້ເຫັນ. (ແນ່ນອນ ທຸກສິ່ງນີ້ຈະບໍ່ສາມາດເຫັນໄດ້ໂດຍຜູ້ຄົນທີ່ບໍ່ຍອມຮັບເອົາພາລະກິດຂອງພຣະເຈົ້າ

ໃນຍຸກແຫ່ງອານາຈັກ). ໃບໜ້າທີ່ແທ້ຈິງຂອງພຣະເຈົ້າບໍ່ສາມາດອະທິບາຍໄດ້ຢ່າງສົມບູນໂດຍໃຊ້ພາສາຂອງມະນຸດ ແລະ ດັ່ງນັ້ນ ພຣະເຈົ້າຈຶ່ງໃຊ້ວິທີການທີ່ພຣະອົງສະແດງອອກໃນອຸປະນິໄສໂດຍທຳມະຊາດຂອງພຣະອົງເພື່ອສະແດງໃບໜ້າທີ່ແທ້ຈິງຂອງພຣະອົງໃຫ້ມະນຸດເຫັນ. ນັ້ນໝາຍຄວາມວ່າທຸກຄົນທີ່ໄດ້ເຫັນຄຸນຄ່າອຸປະນິໄສໂດຍທຳມະຊາດຂອງບຸດມະນຸດກໍຈະໄດ້ເຫັນໃບໜ້າທີ່ແທ້ຈິງຂອງບຸດມະນຸດ ເພາະວ່າພຣະເຈົ້າແມ່ນຍິ່ງໃຫຍ່ເກີນໄປ ແລະ ບໍ່ສາມາດອະທິບາຍໄດ້ຢ່າງສົມບູນໂດຍໃຊ້ພາສາຂອງມະນຸດໄດ້. ຫຼັງຈາກທີ່ມະນຸດໄດ້ຜະເຊີນກັບທຸກຂັ້ນຕອນຂອງພາລະກິດຂອງພຣະເຈົ້າໃນຍຸກແຫ່ງອານາຈັກ, ພວກເຂົາກໍຈະຮູ້ຈັກຄວາມໝາຍທີ່ແທ້ຈິງຂອງຄຳເວົ້າຂອງໂຢຮັນ ທີ່ເພິ່ນເວົ້າເຖິງບຸດມະນຸດຢູ່ໃນທ່າມກາງຄັນໂຄມໄຟວ່າ: "ຫົວ ແລະ ຜົມຂອງພຣະອົງເປັນສີຂາວເໝືອນຂົນແກະ, ຂາວເໝືອນດັ່ງຫິມະ ແລະ ຕາຂອງພຣະອົງເປັນເໝືອນດັ່ງແປວໄຟ; ຕີນຂອງພຣະອົງເໝືອນດັ່ງທອງຍອດດີ ທີ່ເບິ່ງຄືກັບວ່າ ຖືກຫຼອມໃນເຕົາໄຟ ແລະ ສຽງຂອງພຣະອົງດັງກ້ອງເໝືອນດັ່ງສຽງນໍ້າໄຫລ. ພຣະອົງຖືດາວເຈັດດວງໃນມືເບື້ອງຂວາຂອງພຣະອົງ ແລະ ໃນປາກຂອງພຣະອົງມີດາບສອງຄົມເດ່ອອກມາ ແລະ ໃບໜ້າຂອງພຣະອົງເປັນເໝືອນດັ່ງຕາເວັນທີ່ສ່ອງແສງຢູ່ໃນລັດສະໝີຂອງພຣະອົງ". ໃນເວລານັ້ນ, ເຈົ້າຈະຮູ້ຢ່າງບໍ່ຕ້ອງສົງໄສວ່າ ເນື້ອໜັງທີ່ທຳມະດານີ້ທີ່ໄດ້ກ່າວຢ່າງຫຼວງຫຼາຍຄືພຣະເຈົ້າຜູ້ບັງເກີດເປັນມະນຸດຄັ້ງທີສອງໂດຍປະຕິເສດບໍ່ໄດ້. ຍິ່ງໄປກວ່ານັ້ນ ເຈົ້າຈະຮູ້ສຶກຢ່າງແທ້ຈິງວ່າ ເຈົ້າຊ່າງໂຊກດີ ແລະ ຮູ້ສຶກວ່າຕົນເອງເປັນຄົນທີ່ໂຊກດີທີ່ສຸດ. ເຈົ້າຈະບໍ່ເຕັມໃຈຮັບເອົາພອນນີ້ບໍ?

ພາກທຳອິດຂອງໜັງສືເຫຼັ້ມນີ້ແມ່ນ "ພຣະຄຳຂອງພຣະຄຣິດໃນຕົ້ນເດີມ". ພຣະຄຳເຫຼົ່ານີ້ສະແດງເຖິງການປ່ຽນແປງຈາກຈຸດສິ້ນສຸດຂອງຍຸກແຫ່ງພຣະຄຸນ ຈົນເຖິງການເລີ່ມຕົ້ນຂອງຍຸກແຫ່ງອານາຈັກ ແລະ ພຣະຄຳເຫຼົ່ານີ້ແມ່ນຄຳພະຍານຢ່າງເປີດເຜີຍຂອງພຣະວິນຍານບໍລິສຸດຕໍ່ຄຣິສຕະຈັກຕ່າງໆກ່ຽວກັບບຸດມະນຸດ. ພ້ອມນີ້ ພຣະຄຳດັ່ງກ່າວຍັງໄດ້ຖືກບັນລຸຕາມຂໍ້ພຣະທຳໃນພຣະນິມິດທີ່ກ່າວໄວ້ວ່າ: "ຄົນໃດມີຫູ ຄົນນັ້ນຈົ່ງຟັງສິ່ງທີ່ພຣະວິນຍານກ່າວຕໍ່ຄຣິສຕະຈັກ". ພຣະທຳເຫຼົ່ານີ້ສະແດງເຖິງຂັ້ນຕອນທຳອິດຂອງພາລະກິດທີ່ພຣະເຈົ້າໄດ້ເລີ່ມຕົ້ນໃນຍຸກແຫ່ງອານາຈັກ. ພາກທີສອງຂອງໜັງສືເຫຼັ້ມນີ້ປະກອບດ້ວຍພຣະທຳທີ່ກ່າວໂດຍກົງຈາກບຸດມະນຸດ ພາຍຫຼັງທີ່ພຣະອົງໄດ້ເປີດເຜີຍຕົນເອງຢ່າງເປັນທາງການ. ມັນປະກອບດ້ວຍພຣະຄຳ ແລະ ພຣະທຳຫຼາຍປະເພດ ເຊັ່ນ: ຄຳທຳນາຍ, ການເປີດເຜີຍຄວາມເລິກລັບ ແລະ ຫົນທາງແຫ່ງຊີວິດ, ເນື້ອຫາທີ່ຂ້ອນຂ້າງອຸດົມສົມບູນ, ມີການຄາດຄະເນເຖິງອະນາຄົດຂອງອານາຈັກ, ການເປີດເຜີຍຄວາມເລິກລັບຂອງແຜນການຄຸ້ມຄອງຂອງພຣະເຈົ້າ, ການວິໄຈກ່ຽວກັບທຳມະຊາດຂອງມະນຸດ, ການແນະນຳ ແລະ ການຕັກເຕືອນ, ການພິພາກສາທີ່ຮຸນແຮງ, ຄຳປອບໃຈຢ່າງຈິງໃຈ, ການສົນທະນາກ່ຽວກັບຊີວິດ, ການສົນທະນາ ກ່ຽວກັບເສັ້ນທາງເຂົ້າ ແລະ ອື່ນໆ. ສະຫຼຸບກໍຄື ສິ່ງທີ່ພຣະເຈົ້າມີ ແລະ ເປັນ ພ້ອມທັງອຸປະນິໄສຂອງພຣະເຈົ້າແມ່ນລ້ວນແລ້ວແຕ່ໄດ້ສະແດງອອກໃນພາລະກິດຂອງພຣະອົງ ແລະ ພຣະທຳຂອງພຣະອົງ. ແນ່ນອນ ພາລະກິດຂອງພຣະເຈົ້າໃນການບັງເກີດເປັນມະນຸດໃນປັດຈຸບັນແມ່ນເພື່ອສະແດງອອກເຖິງອຸປະນິໄສຂອງພຣະອົງເຊິ່ງສ່ວນໃຫຍ່ແມ່ນຜ່ານການຂ້ຽນຕີ ແລະ ການພິພາກສາ. ບົນພື້ນຖານນີ້, ພຣະອົງໄດ້ນຳຄວາມຈິງ

ມາສູ່ມະນຸດຫຼາຍຂຶ້ນ ແລະ ໄດ້ຊີ້ໃຫ້ພວກເຂົາເຫັນເຖິງຫຼາຍວິທີທາງຂອງການປະຕິບັດ, ນີ້ກໍເພື່ອບັນລຸຈຸດປະສົງຂອງພຣະອົງໃນການເອົາຊະນະມະນຸດ ແລະ ຊ່ວຍມະນຸດໃຫ້ລອດພົ້ນຈາກອຸປະນິໄສທີ່ເສື່ອມຊາມຂອງເຂົາເອງ. ນີ້ຄືສິ່ງທີ່ນອນຢູ່ເບື້ອງຫຼັງພາລະກິດຂອງພຣະເຈົ້າໃນຍຸກແຫ່ງອານາຈັກ. ເຈົ້າຕ້ອງການທີ່ຈະເຂົ້າສູ່ຍຸກໃໝ່ນີ້ບໍ? ເຈົ້າຕ້ອງການທີ່ຈະຫຼຸດພົ້ນອອກຈາກອຸປະນິໄສອັນເສື່ອມຊາມຂອງເຈົ້າບໍ? ເຈົ້າຕ້ອງການທີ່ຈະຮັບເອົາຄວາມຈິງອັນສູງສົ່ງນີ້ບໍ? ເຈົ້າຕ້ອງການທີ່ຈະເຫັນໃບໜ້າແທ້ຈິງຂອງບຸດມະນຸດບໍ? ເຈົ້າຕ້ອງການດຳລົງຊີວິດຢູ່ຢ່າງມີຄຸນຄ່າບໍ? ເຈົ້າຕ້ອງການທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າບໍ? ແລ້ວເຈົ້າຈະຕ້ອນຮັບການສະເດັດກັບມາຂອງພຣະເຢຊູເຈົ້າໄດ້ແນວໃດ?

# ສາລະບານ

## ພາກທີໜຶ່ງ
## ພຣະຄຳຂອງພຣະຄຣິດໃນຕົ້ນເດີມ
### ພຣະທຳຂອງພຣະວິນຍານບໍລິສຸດຕໍ່ກັບຄຣິສຕະຈັກ

(ວັນທີ 11 ກຸມພາ, 1991 ຫາ ວັນທີ 20 ພະຈິກ, 1991)


**ບົດນຳ** ........ 3

ບົດທີ 1 ........ 11
ບົດທີ 2 ........ 13
ບົດທີ 3 ........ 15
ບົດທີ 4 ........ 16
ບົດທີ 5 ........ 17
ບົດທີ 6 ........ 19
ບົດທີ 7 ........ 20
ບົດທີ 8 ........ 22
ບົດທີ 9 ........ 25
ບົດທີ 10 ........ 29
ບົດທີ 11 ........ 31
ບົດທີ 12 ........ 32
ບົດທີ 13 ........ 35
ບົດທີ 14 ........ 41
ບົດທີ 15 ........ 44
ບົດທີ 16 ........ 47
ບົດທີ 17 ........ 48
ບົດທີ 18 ........ 52
ບົດທີ 19 ........ 53
ບົດທີ 20 ........ 56
ບົດທີ 21 ........ 59
ບົດທີ 22 ........ 61
ບົດທີ 23 ........ 64

ບົດທີ 24 .......... 65
ບົດທີ 25 .......... 66
ບົດທີ 26 .......... 67
ບົດທີ 27 .......... 68
ບົດທີ 28 .......... 69
ບົດທີ 29 .......... 71
ບົດທີ 30 .......... 72
ບົດທີ 31 .......... 73
ບົດທີ 32 .......... 74
ບົດທີ 33 .......... 75
ບົດທີ 34 .......... 76
ບົດທີ 35 .......... 80
ບົດທີ 36 .......... 83
ບົດທີ 37 .......... 86
ບົດທີ 38 .......... 88
ບົດທີ 39 .......... 89
ບົດທີ 40 .......... 91
ບົດທີ 41 .......... 92
ບົດທີ 42 .......... 94
ບົດທີ 43 .......... 96
ບົດທີ 44 .......... 98
ບົດທີ 45 .......... 100
ບົດທີ 46 .......... 102
ບົດທີ 47 .......... 104
ບົດທີ 48 .......... 106
ບົດທີ 49 .......... 107
ບົດທີ 50 .......... 109
ບົດທີ 51 .......... 110
ບົດທີ 52 .......... 112
ບົດທີ 53 .......... 114
ບົດທີ 54 .......... 115

ປຶດທີ 55 ........ 117
ປຶດທີ 56 ........ 119
ປຶດທີ 57 ........ 121
ປຶດທີ 58 ........ 123
ປຶດທີ 59 ........ 124
ປຶດທີ 60 ........ 126
ປຶດທີ 61 ........ 128
ປຶດທີ 62 ........ 131
ປຶດທີ 63 ........ 133
ປຶດທີ 64 ........ 136
ປຶດທີ 65 ........ 139
ປຶດທີ 66 ........ 142
ປຶດທີ 67 ........ 144
ປຶດທີ 68 ........ 146
ປຶດທີ 69 ........ 149
ປຶດທີ 70 ........ 152
ປຶດທີ 71 ........ 155
ປຶດທີ 72 ........ 158
ປຶດທີ 73 ........ 161
ປຶດທີ 74 ........ 164
ປຶດທີ 75 ........ 166
ປຶດທີ 76 ........ 169
ປຶດທີ 77 ........ 172
ປຶດທີ 78 ........ 175
ປຶດທີ 79 ........ 179
ປຶດທີ 80 ........ 182
ປຶດທີ 81 ........ 186
ປຶດທີ 82 ........ 190
ປຶດທີ 83 ........ 194
ປຶດທີ 84 ........ 197
ປຶດທີ 85 ........ 201

ບົດທີ 86 ........ 205
ບົດທີ 87 ........ 207
ບົດທີ 88 ........ 211
ບົດທີ 89 ........ 215
ບົດທີ 90 ........ 218
ບົດທີ 91 ........ 222
ບົດທີ 92 ........ 226
ບົດທີ 93 ........ 230
ບົດທີ 94 ........ 233
ບົດທີ 95 ........ 238
ບົດທີ 96 ........ 243
ບົດທີ 97 ........ 247
ບົດທີ 98 ........ 251
ບົດທີ 99 ........ 256
ບົດທີ 100 ........ 260
ບົດທີ 101 ........ 264
ບົດທີ 102 ........ 269
ບົດທີ 103 ........ 274
ບົດທີ 104 ........ 279
ບົດທີ 105 ........ 283
ບົດທີ 106 ........ 287
ບົດທີ 107 ........ 292
ບົດທີ 108 ........ 297
ບົດທີ 109 ........ 302
ບົດທີ 110 ........ 307
ບົດທີ 111 ........ 312
ບົດທີ 112 ........ 317
ບົດທີ 113 ........ 322
ບົດທີ 114 ........ 327
ບົດທີ 115 ........ 330
ບົດທີ 116 ........ 334

ບົດທີ 117 ........ 338
ບົດທີ 118 ........ 341
ບົດທີ 119 ........ 345
ບົດທີ 120 ........ 348

# ພາກທີສອງ
# ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ

(ວັນທີ 20 ກຸມພາ, 1992 ຫາ ວັນທີ 1 ມິຖຸນາ, 1992)

**ບົດນຳ** ........ 355
ບົດທີ 1 ........ 357
ບົດທີ 2 ........ 359
ບົດທີ 3 ........ 361
ບົດທີ 4 ........ 364
ບົດທີ 5 ........ 368
ບົດທີ 6 ........ 372
ບົດທີ 7 ........ 376
ບົດທີ 8 ........ 378
ບົດທີ 9 ........ 382
ບົດທີ 10 ........ 386
ເພງແຫ່ງອານາຈັກ ........ 391
ບົດທີ 11 ........ 393
ບົດທີ 12 ........ 397
ບົດທີ 13 ........ 401
ບົດທີ 14 ........ 405
ບົດທີ 15 ........ 409
ບົດທີ 16 ........ 414
ບົດທີ 17 ........ 418
ບົດທີ 18 ........ 422
ບົດທີ 19 ........ 427

ບົດທີ 20 ........ 432
ບົດທີ 21 ........ 436
ບົດທີ 22 ........ 440
ບົດທີ 23 ........ 444
ບົດທີ 24 ........ 449
ບົດທີ 25 ........ 453
ພວກເຈົ້າທຸກຄົນ ຈົ່ງປິຕິຍິນດີ! ........ 457
ບົດທີ 26 ........ 459
ບົດທີ 27 ........ 463
ບົດທີ 28 ........ 467
ບົດທີ 29 ........ 471
ບົດທີ 30 ........ 475
ບົດທີ 31 ........ 479
ບົດທີ 32 ........ 483
ບົດທີ 33 ........ 487
ບົດທີ 34 ........ 491
ບົດທີ 35 ........ 495
ບົດທີ 36 ........ 499
ບົດທີ 37 ........ 503
ບົດທີ 38 ........ 506
ບົດທີ 39 ........ 510
ບົດທີ 40 ........ 514
ບົດທີ 41 ........ 518
ບົດທີ 42 ........ 522
ບົດທີ 43 ........ 526
ບົດທີ 44 ........ 530
ບົດທີ 45 ........ 534
ບົດທີ 46 ........ 538
ບົດທີ 47 ........ 542

# ພາກພະໜວກ
# ການຕີຄວາມໝາຍຄວາມລຶກລັບແຫ່ງ “ພຣະທຳຂອງພຣະເຈົ້າ ຕໍ່ກັບຈັກກະວານທັງໝົດ”

ບົດທີ 1 ........ 549
ບົດທີ 3 ........ 555
ບົດທີ 4 ........ 562
ບົດທີ 5 ........ 570
ບົດທີ 6 ........ 575
ກ່ຽວກັບຊີວິດຂອງເປໂຕ ........ 583
ບົດທີ 8 ........ 589
ບົດທີ 9 ........ 593
ບົດເສີມທີ: ບົດທີ 1 ........ 600
ບົດທີ 10 ........ 603
ບົດທີ 11 ........ 609
ບົດເສີມທີ: ບົດທີ 2 ........ 615
ບົດທີ 12 ........ 618
ບົດທີ 13 ........ 627
ບົດທີ 14 ........ 632
ບົດທີ 15 ........ 637
ບົດທີ 16 ........ 644
ບົດທີ 17 ........ 651
ບົດທີ 18 ........ 658
ບົດທີ 19 ........ 664
ບົດທີ 20 ........ 669
ບົດທີ 21 ........ 674
ບົດທີ 22 ແລະ 23 ........ 678
ບົດທີ 24 ແລະ 25 ........ 684
ບົດທີ 26 ........ 688

ບົດທີ 27 ........ 693
ບົດທີ 28 ........ 698
ບົດທີ 29 ........ 701
ບົດທີ 30 ........ 706
ບົດທີ 31 ........ 712
ບົດທີ 32 ........ 715
ບົດທີ 33 ........ 721
ບົດທີ 35 ........ 724
ບົດທີ 36 ........ 730
ບົດທີ 38 ........ 736
ບົດທີ 39 ........ 741
ບົດທີ 40 ........ 744
ບົດທີ 41 ........ 747
ບົດທີ 42 ........ 753
ບົດທີ 44 ແລະ 45 ........ 759
ບົດທີ 46 ........ 761

## ພາກທີສາມ
## ພຣະທຳຂອງພຣະຄຣິດໃນຂະນະ ທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ

(ມິຖຸນາ 1992 ຫາ ວັນທີ 23 ມີນາ 2010)

**ບົດນຳ** ........ 767

## I

(ມິຖຸນາ 1992 ຫາ ຕຸລາ 1992)

ເສັ້ນທາງ... (1) ........ 775
ເສັ້ນທາງ... (2) ........ 779
ເສັ້ນທາງ... (3) ........ 784
ເສັ້ນທາງ... (4) ........ 789

ເສັ້ນທາງ... (5) .......... 794
ເສັ້ນທາງ... (6) .......... 799
ເສັ້ນທາງ... (7) .......... 804
ເສັ້ນທາງ... (8) .......... 809
ຜູ້ເຊື່ອຄວນມີມຸມມອງແບບໃດ .......... 815
ກ່ຽວກັບຂັ້ນຕອນຂອງພາລະກິດຂອງພຣະເຈົ້າ .......... 818
ມະນຸດທີ່ເສື່ອມຊາມບໍ່ສາມາດເປັນຕົວແທນພຣະເຈົ້າໄດ້ .......... 820
ການບໍລິການທາງສາສະໜາຕ້ອງຖືກລົບລ້າງ .......... 823
ໃນຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າ ເຈົ້າຄວນເຊື່ອຟັງພຣະເຈົ້າ .......... 826
ມັນສຳຄັນຫຼາຍທີ່ຈະສ້າງຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ .......... 829
ຊີວິດທາງຈິດວິນຍານທຳມະດານຳພາຄົນໄປສູ່ທາງທີ່ຖືກຕ້ອງ .......... 834
ຄຳສັນຍາຕໍ່ບັນດາຜູ້ທີ່ຖືກເຮັດໃຫ້ສົມບູນແບບ .......... 837
ຄົນຊົ່ວຈະຖືກລົງໂທດຢ່າງແນ່ນອນ .......... 842
ວິທີເຂົ້າສູ່ສະພາບປົກກະຕິ .......... 846
ວິທີຮັບໃຊ້ໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ .......... 850
ວິທີການຮູ້ຈັກຄວາມເປັນຈິງ .......... 856
ກ່ຽວກັບຊີວິດຝ່າຍວິນຍານປົກກະຕິ .......... 860
ການສົນທະນາກ່ຽວກັບຊີວິດຄຣິສຕະຈັກ ແລະ ຊີວິດທີ່ເປັນຈິງ .......... 864
ສຳລັບທຸກຄົນທີ່ປະຕິບັດໜ້າທີ່ຂອງຕົນ .......... 870
ກ່ຽວກັບການນຳໃຊ້ມະນຸດຂອງພຣະເຈົ້າ .......... 873
ຫຼັງຈາກທີ່ເຈົ້າເຂົ້າໃຈຄວາມຈິງ, ເຈົ້າຄວນນຳມັນເຂົ້າສູ່ການປະຕິບັດ .......... 875
ຜູ້ທີ່ໄດ້ຮັບຄວາມລອດພົ້ນແມ່ນຜູ້ທີ່ຍິນດີປະຕິບັດຕາມຄວາມຈິງ .......... 880
ສິ່ງທີ່ຜູ້ນຳພາທີ່ເໝາະສົມຄວນມີ .......... 884
ວ່າດ້ວຍເລື່ອງປະສົບການ .......... 886
ພຣະບັນຍັດແຫ່ງຍຸກໃໝ່ .......... 890
ອານາຈັກພັນປີມາຮອດແລ້ວ .......... 894
ຄວາມສຳພັນຂອງເຈົ້າກັບພຣະເຈົ້າເປັນແນວໃດ? .......... 898
ຕັ້ງໃຈກັບຄວາມເປັນຈິງໃຫ້ຫຼາຍຂຶ້ນ .......... 904
ການຮັກສາພຣະບັນຍັດ ແລະ ການປະຕິບັດຄວາມຈິງ .......... 910
ເຈົ້າຄວນຮູ້ວ່າ ພຣະເຈົ້າທີ່ແທ້ທີ່ແທ້ຈິງແມ່ນພຣະອົງເຈົ້າເອງ .......... 915
ການປະຕິບັດຄວາມຈິງເທົ່ານັ້ນຄືການມີຄວາມເປັນຈິງ .......... 921

ການຮູ້ຈັກພາລະກິດຂອງພຣະເຈົ້າໃນປັດຈຸບັນ ........................................................ 926
ພາລະກິດຂອງພຣະເຈົ້າງ່າຍດາຍສຳລັບທີ່ມະນຸດຈິນຕະນາການບໍ? ................................ 934
ເນື່ອງຈາກເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຄວນດຳລົງຊີວິດຢູ່ເພື່ອຄວາມຈິງ ........................... 938
ສຽງຟ້າຮ້ອງທັງເຈັດກຳລັງທຳນາຍວ່າ ຂ່າວປະເສີດແຫ່ງອານາຈັກຈະແຜ່ຂະຫຍາຍໄປທົ່ວຈັກກະວານ ........................................................................................ 942
ຄວາມແຕກຕ່າງທີ່ສຳຄັນລະຫວ່າງພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ຜູ້ຄົນທີ່ຖືກໃຊ້ໂດຍພຣະເຈົ້າ ........................................................................................ 946
ໃຫ້ຫຼີກໜີຈາກອິດທິພົນຂອງຄວາມມືດ ແລະ ເຈົ້າຈະຖືກຮັບເອົາໂດຍພຣະເຈົ້າ ................. 954
ໃນຄວາມເຊື່ອ, ຄົນໆໜຶ່ງຕ້ອງໃຫ້ຄວາມສຳຄັນກັບຄວາມເປັນຈິງ ນັ້ນກໍຄື ການເຂົ້າຮ່ວມໃນພິທີກຳທາງສາສະໜາບໍ່ແມ່ນຄວາມເຊື່ອ ........................................................ 960
ຜູ້ທີ່ຮູ້ຈັກພາລະກິດຂອງພຣະເຈົ້າໃນປັດຈຸບັນເທົ່ານັ້ນຈຶ່ງອາດຮັບໃຊ້ພຣະເຈົ້າໄດ້ ................. 963
ຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າແມ່ນຄວາມຮັກແບບທຳມະຊາດ .............................. 969
ວ່າດ້ວຍການປະຕິບັດການອະທິຖານ .................................................................. 976
ຮູ້ຈັກພາລະກິດໃໝ່ສຸດຂອງພຣະເຈົ້າ ແລະ ຕິດຕາມຮອຍພຣະບາດຂອງພຣະອົງ ................. 983
ຜູ້ຄົນທີ່ປ່ຽນແປງອຸປະນິໄສແມ່ນຄົນທີ່ໄດ້ເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ ........................................................................................ 994
ການເຮັດໃຫ້ຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າ ................................................ 1002
ໃຫ້ໃສ່ໃຈຄວາມປະສົງຂອງພຣະເຈົ້າເພື່ອບັນລຸຄວາມສົມບູນ .................................... 1009
ພຣະເຈົ້າເຮັດໃຫ້ຜູ້ທີ່ຕາມໃຈພຣະອົງເອງສົມບູນ .................................................. 1016
ຜູ້ທີ່ເຊື່ອຟັງພຣະເຈົ້າດ້ວຍໃຈຈິງ ຈະຖືກພຣະເຈົ້າຮັບເອົາຢ່າງແນ່ນອນ .......................... 1022
ຍຸກແຫ່ງລາຊະອານາຈັກແມ່ນຍຸກແຫ່ງພຣະທຳ ...................................................... 1029
ທຸກສິ່ງຖືກບັນລຸໂດຍພຣະທຳຂອງພຣະເຈົ້າ ........................................................... 1040
ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງແມ່ນຄົນທີ່ສາມາດຍອມອ່ອນນ້ອມຕໍ່ຄວາມເປັນຈິງຂອງພຣະອົງຢ່າງສິ້ນເຊີງ ............................................................................ 1052
ຄົນທີ່ຈະຖືກເຮັດໃຫ້ສົມບູນຕ້ອງຜ່ານການຫຼໍ່ຫຼອມ ................................................ 1059
ເມື່ອເຈົ້າປະສົບກັບການທົດລອງທີ່ເຈັບປວດເທົ່ານັ້ນ ເຈົ້າຈຶ່ງສາມາດຮູ້ຈັກຄວາມເປັນຕາຮັກຂອງພຣະເຈົ້າ ................................................................................. 1074
ມີພຽງແຕ່ການຮັກພຣະເຈົ້າເທົ່ານັ້ນທີ່ເປັນການເຊື່ອໃນພຣະເຈົ້າຢ່າງແທ້ຈິງ ..................... 1081
ການສົນທະນາສັ້ນໆກ່ຽວກັບ “ອານາຈັກພັນປີມາຮອດແລ້ວ” .................................... 1091
ມີພຽງຄົນທີ່ຮູ້ຈັກພຣະເຈົ້າເທົ່ານັ້ນທີ່ສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້ ................... 1096
ວິທີທີ່ເປໂຕມາຮູ້ຈັກພຣະເຢຊູ ........................................................................ 1104

ເມື່ອປະສົບກັບການທົດລອງເທົ່ານັ້ນ ມະນຸດຈຶ່ງສາມາດມີຄວາມຮັກຢ່າງແທ້ຈິງ ................ 1115
ຄົນທີ່ຮັກພຣະເຈົ້າຈະດຳລົງຊີວິດຢູ່ພາຍໃນແສງສະຫວ່າງຂອງພຣະອົງຕະຫຼອດໄປ ............. 1122
ມີພຽງບັນດາຜູ້ທີ່ໃສ່ໃຈການປະຕິບັດເທົ່ານັ້ນທີ່ສາມາດຖືກເຮັດໃຫ້ສົມບູນ ..................... 1132
ພາລະກິດຂອງພຣະວິນຍານບໍລິສຸດ ແລະ ພາລະກິດຂອງຊາຕານ ................................. 1140
ຄຳເຕືອນເຖິງຜູ້ຄົນທີ່ບໍ່ປະຕິບັດຄວາມຈິງ ............................................................ 1147
ເຈົ້າຄວນຮັກສາຄວາມອຸທິດຂອງເຈົ້າຕໍ່ພຣະເຈົ້າໄວ້ ................................................ 1153
ເຈົ້າຄືບຸກຄົນທີ່ໄດ້ກັບມາມີຊີວິດແລ້ວບໍ? ............................................................ 1164
ການບໍ່ປ່ຽນແປງອຸປະນິໄສຄືການເປັນປໍລະປັກຕໍ່ພຣະເຈົ້າ ........................................... 1168
ທຸກຄົນທີ່ບໍ່ຮູ້ຈັກພຣະເຈົ້າຄືຄົນທີ່ຕໍ່ຕ້ານພຣະເຈົ້າ .................................................... 1175

## II

(ພະຈິກ 1992 ຫາ ມິຖຸນາ 1993)

ພາລະກິດ ແລະ ທາງເຂົ້າ (1) ........................................................................ 1183
ພາລະກິດ ແລະ ທາງເຂົ້າ (2) ........................................................................ 1187
ພາລະກິດ ແລະ ທາງເຂົ້າ (3) ........................................................................ 1192
ພາລະກິດ ແລະ ທາງເຂົ້າ (4) ........................................................................ 1198
ພາລະກິດ ແລະ ທາງເຂົ້າ (5) ........................................................................ 1204
ພາລະກິດ ແລະ ທາງເຂົ້າ (6) ........................................................................ 1211
ພາລະກິດ ແລະ ທາງເຂົ້າ (7) ........................................................................ 1219
ພາລະກິດ ແລະ ທາງເຂົ້າ (8) ........................................................................ 1227
ພາລະກິດ ແລະ ທາງເຂົ້າ (9) ........................................................................ 1235
ພາລະກິດ ແລະ ທາງເຂົ້າ (10) ...................................................................... 1243
ນິມິດແຫ່ງພາລະກິດຂອງພຣະເຈົ້າ (1) ........................................................... 1254
ນິມິດແຫ່ງພາລະກິດຂອງພຣະເຈົ້າ (2) ........................................................... 1260
ນິມິດແຫ່ງພາລະກິດຂອງພຣະເຈົ້າ (3) ........................................................... 1269
ກ່ຽວກັບພຣະຄຳພີ (1) .................................................................................. 1289
ກ່ຽວກັບພຣະຄຳພີ (2) .................................................................................. 1300
ກ່ຽວກັບພຣະຄຳພີ (3) .................................................................................. 1304
ກ່ຽວກັບພຣະຄຳພີ (4) .................................................................................. 1311
ການປະຕິບັດ (1) ......................................................................................... 1316
ການປະຕິບັດ (2) ......................................................................................... 1329

ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (1) .................................................... 1336
ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (2) .................................................... 1352
ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (3) .................................................... 1358
ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (4) .................................................... 1367
ການບັງເກີດເປັນມະນຸດທັງສອງຄັ້ງໄດ້ເຮັດໃຫ້ຄວາມສຳຄັນຂອງການບັງເກີດເປັນ
ມະນຸດສຳເລັດ ................................................................................................... 1386
ພຣະເຈົ້າຕຣີເອການຸພາບມີແທ້ບໍ? ......................................................................... 1395
ການປະຕິບັດ (3) ................................................................................................ 1408
ການປະຕິບັດ (4) ................................................................................................ 1415
ການປະຕິບັດ (5) ................................................................................................ 1421
ເບື້ອງຫຼັງແທ້ຈິງຂອງພາລະກິດແຫ່ງການເອົາຊະນະ (1) ............................................ 1427
ເປັນຫຍັງເຈົ້າຈຶ່ງບໍ່ເຕັມໃຈທີ່ຈະເປັນຕົວປະກອບ? ..................................................... 1439
ວິທີທີ່ຜົນຂອງບາດກ້າວທີສອງຂອງພາລະກິດແຫ່ງການເອົາຊະນະຖືກບັນລຸ .................... 1453
ເບື້ອງຫຼັງແທ້ຈິງຂອງພາລະກິດແຫ່ງການເອົາຊະນະ (2) ............................................ 1463
ເບື້ອງຫຼັງແທ້ຈິງຂອງພາລະກິດແຫ່ງການເອົາຊະນະ (3) ............................................ 1469
ເບື້ອງຫຼັງແທ້ຈິງຂອງພາລະກິດແຫ່ງການເອົາຊະນະ (4) ............................................ 1479
ການປະຕິບັດ (6) ................................................................................................ 1486
ການປະຕິບັດ (7) ................................................................................................ 1493
ການປະຕິບັດ (8) ................................................................................................ 1510
ຮັບໃຊ້ດັ່ງທີ່ຊາວອິດສະຣາເອນເຮັດ ...................................................................... 1514
ການເພີ່ມຄວາມສາມາດແມ່ນເພື່ອຮັບເອົາຄວາມລອດພົ້ນຂອງພຣະເຈົ້າ ......................... 1521
ຄວາມສຳຄັນຂອງການຊ່ວຍເຊື້ອສາຍຂອງໂມອາບໃຫ້ລອດພົ້ນ ................................. 1526
ປະສົບການຂອງເປໂຕ: ຄວາມຮູ້ຂອງເພິ່ນກ່ຽວກັບການຕີສອນ ແລະ ການພິພາກສາ ......... 1541
ພວກເຈົ້າຕ້ອງເຂົ້າໃຈພາລະກິດ ຢ່າປະຕິບັດຕາມຢ່າງສັບສົນ! ...................................... 1566
ວິທີທີ່ເຈົ້າຄວນຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງ ................................................. 1572

## III

(ກໍລະກົດ 1993 ຫາ ມີນາ 1994)

ເຈົ້າຄວນໃຫ້ຄວາມສົນໃຈກັບພາລະກິດໃນອະນາຄົດຂອງເຈົ້າແນວໃດ? ....................... 1585
ເປົ້າໝາຍຂອງການຄຸ້ມຄອງມະນຸດຊາດ ................................................................. 1587
ທາດແທ້ ແລະ ຕົວຕົນຂອງມະນຸດ ....................................................................... 1591

ຕົວຕົນໂດຍທຳມະຊາດຂອງມະນຸດ ແລະ ຄຸນຄ່າຂອງພວກເຂົາ: ພວກເຂົາເປັນແບບໃດກັນແທ້? .......... 1595
ຜູ້ທີ່ບໍ່ຮຽນຮູ້ ແລະ ຍັງຄົງໂງ່ຈ້າ: ພວກເຂົາບໍ່ແມ່ນສັດຮ້າຍບໍ? .......... 1596
ຜູ້ຄົນທີ່ຖືກເລືອກໃນປະເທດຈີນບໍ່ສາມາດເປັນຕົວແທນຊົນເຜົ່າໃດໃນປະເທດອິດສະຣາເອນ .......... 1600
ຄວາມເຂົ້າໃຈຂອງພວກເຈົ້າກ່ຽວກັບການອວຍພອນແມ່ນຫຍັງ? .......... 1602
ແມ່ນຫຍັງຄືຄວາມເຂົ້າໃຈຂອງເຈົ້າກ່ຽວກັບພຣະເຈົ້າ? .......... 1606
ການເປັນຄົນທີ່ແທ້ຈິງໝາຍເຖິງຫຍັງ .......... 1612
ເຈົ້າຮູ້ຫຍັງແດ່ກ່ຽວກັບຄວາມສັດທາ? .......... 1618
ເມື່ອໃບໄມ້ທີ່ຫຼົ່ນໄດ້ກັບຄືນສູ່ຮາກເຫງົ້າຂອງມັນ, ເຈົ້າຈະເສຍໃຈກັບສິ່ງຊົ່ວຮ້າຍທີ່ເຈົ້າໄດ້ເຮັດ .......... 1625
ບໍ່ມີໃຜທີ່ເກີດຈາກເນື້ອໜັງສາມາດລອດພົ້ນຈາກມື້ແຫ່ງຄວາມໂກດຮ້າຍ .......... 1631
ພຣະຜູ້ຊ່ວຍໃຫ້ລອດພົ້ນໄດ້ກັບຄືນມາເທິງ "ກ້ອນເມກສີຂາວ" .......... 1638
ພາລະກິດເຜີຍແຜ່ຄຳສອນຂອງພຣະເຈົ້າເປັນພາລະກິດຊ່ວຍໃຫ້ມະນຸດລອດພົ້ນ .......... 1643
ພວກເຈົ້າທຸກຄົນຕ່ຳໃນບຸກຄະລິກຫຼາຍ! .......... 1648
ພາລະກິດໃນຍຸກແຫ່ງພຣະບັນຍັດ .......... 1654
ເລື່ອງຈິງທີ່ຢູ່ເບື້ອງຫຼັງພາລະກິດໃນຍຸກແຫ່ງການໄຖ່ບາບ .......... 1659
ພຣະທຳສຳລັບຄົນໜຸ່ມ ແລະ ຄົນເຖົ້າ .......... 1664
ເຈົ້າຄວນຮູ້ວ່າ ມະນຸດຊາດທັງໝົດໄດ້ພັດທະນາມາຮອດມື້ນີ້ໄດ້ແນວໃດ .......... 1671
ວ່າດ້ວຍເລື່ອງຕຳແໜ່ງ ແລະ ຕົວຕົນ .......... 1689
ມີພຽງແຕ່ຄົນທີ່ຖືກເຮັດໃຫ້ສົມບູນແລ້ວເທົ່ານັ້ນຈຶ່ງສາມາດດຳລົງຊີວິດທີ່ມີຄວາມໝາຍໄດ້ .......... 1706
ພວກເຈົ້າຄວນວາງພອນທາງດ້ານສະຖານະໄວ້ທາງຂ້າງ ແລະ ເຂົ້າໃຈຄວາມປະສົງຂອງພຣະເຈົ້າເພື່ອນຳຄວາມລອດພົ້ນມາສູ່ມະນຸດ .......... 1716
ມະນຸດທີ່ຈຳກັດພຣະເຈົ້າໃນແນວຄິດຂອງເຂົາຈະສາມາດຮັບການເປີດເຜີຍຂອງພຣະອົງໄດ້ແນວໃດ? .......... 1725
ມີພຽງຄົນທີ່ຮູ້ຈັກພຣະເຈົ້າ ແລະ ພາລະກິດຂອງພຣະອົງເທົ່ານັ້ນທີ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້ .......... 1731
ຄວາມແຕກຕ່າງລະຫວ່າງພັນທະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ໜ້າທີ່ຂອງມະນຸດ .......... 1741
ພຣະເຈົ້າແມ່ນພຣະຜູ້ເປັນເຈົ້າແຫ່ງການຊົງສ້າງທັງປວງ .......... 1751

ເຈົ້າຢືນຢູ່ຈຸດໃດໃນຈົດໝາຍສິບສາມສະບັບ? ........................................................ 1757
ຄວາມສຳເລັດ ຫຼື ຄວາມລົ້ມເຫຼວແມ່ນຂຶ້ນກັບເສັ້ນທາງມະນຸດຍ່າງ ............................. 1764
ພາລະກິດຂອງພຣະເຈົ້າ ແລະ ພາລະກິດຂອງມະນຸດ ................................................ 1782
ການຮູ້ຈັກພາລະກິດສາມຂັ້ນຕອນຂອງພຣະເຈົ້າແມ່ນເສັ້ນທາງໄປສູ່ການຮູ້ຈັກພຣະເຈົ້າ ......... 1804
ມະນຸດຊາດທີ່ເສື່ອມຊາມຕ້ອງການຄວາມລອດພົ້ນຈາກພຣະເຈົ້າທີ່ບັງເກີດເປັນມະນຸດ
ຫຼາຍຍິ່ງຂຶ້ນ ........................................................................................................ 1823
ແກ່ນແທ້ຂອງເນື້ອໜັງທີ່ພຣະເຈົ້າສະຖິດຢູ່ .......................................................... 1844
ພາລະກິດຂອງພຣະເຈົ້າ ແລະ ການປະຕິບັດຂອງມະນຸດ ........................................... 1859
ແກ່ນແທ້ຂອງພຣະຄຣິດຄືການເຊື່ອຟັງຄວາມປະສົງຂອງພຣະບິດາໃນສະຫວັນ ................. 1880
ການຟື້ນຟູຊີວິດປົກກະຕິຂອງມະນຸດ ແລະ ການນຳພາເຂົາໄປສູ່ປາຍທາງທີ່ມະຫັດສະຈັນ ........ 1890
ພຣະເຈົ້າ ແລະ ມະນຸດຈະເຂົ້າບ່ອນພັກເຊົາພ້ອມກັນ ............................................... 1912

# IV

(1994 ຫາ ວັນທີ 23 ມີນາ 2010)

ເວລາທີ່ເຈົ້າເຫັນຮ່າງກາຍຝ່າຍວິນຍານຂອງພຣະເຢຊູ, ພຣະເຈົ້າແມ່ນໄດ້ສ້າງສະຫວັນ
ແລະ ແຜ່ນດິນໂລກຂຶ້ນໃໝ່ແລ້ວ ......................................................................... 1933
ຜູ້ທີ່ບໍ່ສາມາດເຂົ້າກັບພຣະຄຣິດເປັນປໍລະປັກກັບພຣະເຈົ້າຢ່າງແນ່ນອນ .......................... 1938
ຫຼາຍຄົນຖືກເອີ້ນ, ແຕ່ໜ້ອຍຄົນທີ່ຖືກເລືອກ ....................................................... 1943
ເຈົ້າຄວນສະແຫວງຫາຫົນທາງທີ່ຈະເຂົ້າກັບພຣະຄຣິດ ............................................ 1947
ເຈົ້າແມ່ນຜູ້ເຊື່ອທີ່ແທ້ຈິງໃນພຣະເຈົ້າບໍ? ............................................................ 1952
ພຣະຄຣິດປະຕິບັດພາລະກິດແຫ່ງການພິພາກສາດ້ວຍຄວາມຈິງ .................................. 1957
ເຈົ້າຮູ້ບໍ? ພຣະເຈົ້າໄດ້ກະທຳການອັນຍິ່ງໃຫຍ່ທ່າມກາງມະນຸດ .................................. 1962
ມີພຽງແຕ່ພຣະຄຣິດແຫ່ງຍຸກສຸດທ້າຍເທົ່ານັ້ນທີ່ສາມາດມອບຫົນທາງແຫ່ງຊີວິດຊົ່ວ
ນິດນິລັນໃຫ້ກັບມະນຸດໄດ້ ................................................................................. 1967
ກະກຽມຄວາມດີໃຫ້ພຽງພໍສຳລັບຈຸດໝາຍປາຍທາງຂອງເຈົ້າ ..................................... 1973
ເຈົ້າຈົງຮັກພັກດີຕໍ່ຜູ້ໃດ? .................................................................................. 1977
ວ່າດ້ວຍເລື່ອງຈຸດໝາຍປາຍທາງ ......................................................................... 1981
ພຣະໂອວາດສາມຂໍ້ ......................................................................................... 1985
ການເຮັດຜິດຈະນຳພາມະນຸດໄປສູ່ນະຣົກ .............................................................. 1990
ມັນເປັນເລື່ອງສຳຄັນຫຼາຍທີ່ຈະເຂົ້າໃຈອຸປະນິໄສຂອງພຣະເຈົ້າ .................................. 1995
ວິທີທີ່ຈະຮູ້ຈັກພຣະເຈົ້າເທິງແຜ່ນດິນໂລກ ............................................................ 2000

ບັນຫາທີ່ຮ້າຍແຮງ: ການທໍລະຍົດ (1) ........ 2006
ບັນຫາທີ່ຮ້າຍແຮງ: ການທໍລະຍົດ (2) ........ 2010
ພວກເຈົ້າຄວນພິຈາລະນາການກະທຳຂອງພວກເຈົ້າ ........ 2015
ພຣະເຈົ້າເປັນແຫຼ່ງກຳເນີດແຫ່ງຊີວິດຂອງມະນຸດ ........ 2019
ການຄໍ່າຄວນຂອງອົງຊົງລິດທານຸພາບສູງສຸດ ........ 2024
ບົດບັນຍັດບໍລິຫານສິບຂໍ້ທີ່ຄົນທີ່ພຣະເຈົ້າເລືອກໄວ້ຕ້ອງເຊື່ອຟັງໃນຍຸກແຫ່ງ
ລາຊະອານາຈັກ ........ 2028

ພາກພະໜວກ 1: ການປາກົດຕົວຂອງພຣະເຈົ້າໄດ້ນຳພາໄປສູ່ຍຸກໃໝ່ ........ 2030
ພາກພະໜວກ 2: ພຣະເຈົ້າຊົງຄຸ້ມຄອງຢູ່ເໜືອຊະຕາກຳຂອງມະນຸດຊາດທັງມວນ ........ 2035
ພາກພະໜວກ 3: ມະນຸດພຽງແຕ່ສາມາດໄດ້ຮັບຄວາມລອດພົ້ນທ່າມກາງການຄຸ້ມຄອງ
ຂອງພຣະເຈົ້າເທົ່ານັ້ນ ........ 2042
ພາກພະໜວກ 4: ເບິ່ງການປາກົດຂອງພຣະເຈົ້າໃນການພິພາກສາ ແລະ ການຕີສອນ
ຂອງພຣະອົງ ........ 2051

**ບົດສົ່ງທ້າຍ** ........ 2063

ໜັງສືເຫຼັ້ມນີ້ປະກອບມີໝາຍເຫດສອງຊະນິດ. ໝາຍເຫດທີ່ໝາຍດ້ວຍຕົວເລກ (ແບບນີ້[1]) ແມ່ນໝາຍເຫດຈາກບົດຄວາມຕົ້ນສະບັບ ແລະໝາຍເຫດທີ່ໝາຍດ້ວຍຕົວອັກສອນ (ແບບນີ້[ກ]) ແມ່ນໝາຍເຫດໃນບົດຄວາມແປ.

# ພາກທີໜຶ່ງ

# ພຣະຄຳຂອງພຣະຄຣິດໃນຕົ້ນເດີມ

## ພຣະທຳຂອງພຣະວິນຍານບໍລິສຸດຕໍ່ກັບຄຣິສຕະຈັກ

(ວັນທີ 11 ກຸມພາ, 1991 ຫາ ວັນທີ 20 ພະຈິກ, 1991)

# ບົດນຳ

ໃນວັນທີ 11 ກຸມພາ ປີ 1991, ພຣະເຈົ້າໄດ້ກ່າວພຣະຄຳຂອງພຣະອົງເປັນຄັ້ງທຳອິດໃນຄຣິສຕະຈັກ ແລະ ພຣະຄຳນີ້ກໍມີຜົນພິເສດຕໍ່ທຸກຄົນທີ່ດຳລົງຊີວິດຢູ່ໃນກະແສຂອງພຣະວິນຍານບໍລິສຸດໃນເວລານັ້ນ. ພຣະຄຳຂໍ້ນີ້ໄດ້ກ່າວວ່າ “ບ່ອນຢູ່ອາໄສຂອງພຣະເຈົ້າກໍໄດ້ປາກົດຂຶ້ນ” ແລະ “ເຈົ້ານາຍແຫ່ງຈັກກະວານ, ພຣະຄຣິດແຫ່ງຍຸກສຸດທ້າຍ, ພຣະອົງຄືດວງຕາເວັນສ່ອງແສງ”. ດ້ວຍພຣະທຳທີ່ມີຄວາມໝາຍຢ່າງເລິກເຊິ່ງເຫຼົ່ານີ້, ທຸກຄົນແມ່ນໄດ້ຖືກນຳເຂົ້າສູ່ອານາຈັກໃໝ່. ທຸກຄົນທີ່ໄດ້ອ່ານພຣະຄຳນີ້ຮູ້ສຶກເຖິງການຊີ້ແຈງເຖິງພາລະກິດໃໝ່, ພາລະກິດອັນຍິ່ງໃຫຍ່ທີ່ພຣະເຈົ້າກຳລັງຈະລິເລີ່ມ. ມັນແມ່ນພຣະຄຳທີ່ສວຍງາມ, ນິ້ມນວນ ແລະ ກະທັດຮັດນີ້ທີ່ໄດ້ນຳພາມະນຸດຊາດທັງປວງເຂົ້າສູ່ພາລະກິດໃໝ່ຂອງພຣະເຈົ້າ ແລະ ເຂົ້າສູ່ຍຸກໃໝ່ ແລະ ວາງພື້ນຖານ ແລະ ກຳນົດຂັ້ນຕອນສຳລັບພາລະກິດຂອງພຣະເຈົ້າໃນການບັງເກີດເປັນມະນຸດຄັ້ງນີ້. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ພຣະຄຳທີ່ພຣະເຈົ້າໄດ້ກ່າວໃນເວລານີ້ແມ່ນພຣະຄຳທີ່ເຊື່ອມຕໍ່ຍຸກຕ່າງໆ, ມັນຄືຄັ້ງທຳອິດນັບຕັ້ງແຕ່ການເລີ່ມຕົ້ນຂອງຍຸກແຫ່ງພຣະຄຸນທີ່ພຣະເຈົ້າໄດ້ກ່າວຢ່າງເປີດເຜີຍຕໍ່ມະນຸດຊາດ, ມັນຄືຄັ້ງທຳອິດທີ່ພຣະອົງໄດ້ກ່າວຫຼັງຈາກທີ່ລີ້ລັບເປັນເວລາສອງພັນປີ ແລະ ຍິ່ງໄປກວ່ານັ້ນ ມັນຄືການເລີ່ມຕົ້ນ, ເປັນຈຸດເລີ່ມຕົ້ນທີ່ສຳຄັນ ສຳລັບພາລະກິດທີ່ພຣະເຈົ້າກຳລັງຈະປະຕິບັດໃນຍຸກແຫ່ງອານາຈັກ.

ຄັ້ງທຳອິດທີ່ພຣະເຈົ້າກ່າວພຣະຄຳ, ພຣະອົງກ່າວໃນລັກສະນະຄຳສັນລະເສີນຈາກທັດສະນະຂອງບຸກຄົນທີສາມ, ໃນພາສາທີ່ທັງສະຫງ່າງາມ ແລະ ລຽບງ່າຍ, ພ້ອມທັງການສະໜອງຊີວິດທີ່ເຂົ້າໃຈໄດ້ໂດຍທັນທີ ແລະ ຢ່າງງ່າຍດາຍ. ດ້ວຍສິ່ງນີ້, ພຣະອົງຈຶ່ງເອົາຜູ້ຄົນກຸ່ມນ້ອຍນີ້, ຜູ້ທີ່ຮູ້ຈັກພຽງແຕ່ຮັບເອົາພຣະຄຸນຂອງພຣະອົງ ໃນຂະນະທີ່ກຳລັງລໍຖ້າການກັບຄືນມາຂອງພຣະເຢຊູເຈົ້າຢ່າງຮ້ອນຮົນ ແລະ ນຳພວກເຂົາເຂົ້າສູ່ອີກຂັ້ນຕອນໜຶ່ງຂອງພາລະກິດໃນແຜນການຄຸ້ມຄອງຂອງພຣະເຈົ້າຢ່າງງຽບໆ. ພາຍໃຕ້ສະຖານະການເຫຼົ່ານີ້, ມະນຸດຊາດບໍ່ຮູ້ຫຍັງເລີຍ ແລະ ແຮງໄກທີ່ຈະກ້າຈິນຕະນາການວ່າ ໃນທີ່ສຸດແລ້ວ ພຣະເຈົ້າກຳລັງຈະປະຕິບັດພາລະກິດແບບໃດ ຫຼື ແມ່ນຫຍັງຄືສິ່ງທີ່ລໍຖ້າໃນຫົນທາງຂ້າງໜ້າ. ຫຼັງຈາກນັ້ນ ພຣະເຈົ້າສືບຕໍ່ກ່າວພຣະຄຳຫຼາຍຢ່າງເພື່ອນຳມະນຸດຊາດເທື່ອລະບາດກ້າວເຂົ້າສູ່ຍຸກໃໝ່. ຢ່າງໜ້າອັດສະຈັນໃຈ, ພຣະຄຳທຸກຂໍ້ຂອງພຣະເຈົ້າແມ່ນແຕກຕ່າງກັນໃນເນື້ອຫາ ແລະ ຍິ່ງໄປກວ່ານັ້ນແມ່ນໃຊ້ຮູບແບບຂອງຄຳສັນລະເສີນ ແລະ ວິທີກ່າວທີ່ແຕກຕ່າງກັນ. ພຣະຄຳເຫຼົ່ານີ້ ທີ່ຄ້າຍຄືກັນໃນນ້ຳສຽງ ແຕ່ແຕກຕ່າງກັນໃນເນື້ອຫາແມ່ນເຕັມໄປດ້ວຍຄວາມຮູ້ສຶກຫ່ວງໃຍ ແລະ ກັງວົນຂອງພຣະເຈົ້າໂດຍບໍ່ປ່ຽນແປງ ແລະ ແຕ່ລະຂໍ້ສ່ວນໃຫຍ່ແມ່ນມີການສະໜອງຊີວິດດ້ວຍເນື້ອຫາທີ່ແຕກຕ່າງກັນ, ພ້ອມທັງພຣະທຳແຫ່ງການເຕືອນ, ການຕັກເຕືອນ ແລະ ການປອບໃຈຈາກພຣະເຈົ້າສູ່ມະນຸດ. ໃນພຣະຄຳເຫຼົ່ານີ້, ຂໍ້ຄວາມເຊັ່ນນີ້ປາກົດຂຶ້ນຊ້ຳແລ້ວຊ້ຳອີກ: “ພຣະເຈົ້າທີ່ແທ້ຈິງອົງດຽວໄດ້ກາຍມາເປັນເນື້ອໜັງ, ພຣະອົງເປັນເຈົ້ານາຍແຫ່ງຈັກກະວານ, ເປັນຜູ້ບັນຊາການສິ່ງທັງປວງ”; “ກະສັດທີ່ມີໄຊຊະນະນັ່ງຢູ່ເທິງບັນລັງອັນສະຫງ່າລາສີຂອງພຣະອົງ”; “ພຣະອົງຈັບຈັກກະວານໄວ້ໃນມືຂອງພຣະອົງ”;

ແລະ ອື່ນໆອີກ. ເນື້ອຄວາມແມ່ນໄດ້ຖືກຖ່າຍທອດໃນຂໍ້ຄວາມເຫຼົ່ານີ້ ຫຼື ຄົນໆໜຶ່ງສາມາດເວົ້າໄດ້ວ່າ ຂໍ້ຄວາມເຫຼົ່ານີ້ໄດ້ຖ່າຍທອດເນື້ອຄວາມສູ່ມະນຸດຊາດ: ພຣະເຈົ້າໄດ້ເຂົ້າມາສູ່ໂລກມະນຸດແລ້ວ, ພຣະເຈົ້າກຳລັງຈະເລີ່ມຕົ້ນພາລະກິດທີ່ຍິ່ງໃຫຍ່ກວ່າເກົ່າ, ອານາຈັກຂອງພຣະເຈົ້າໄດ້ລົງມາຢູ່ທ່າມກາງກຸ່ມຄົນໃດໜຶ່ງແລ້ວ ແລະ ພຣະເຈົ້າໄດ້ຮັບເອົາສະຫງ່າລາສີ ແລະ ເອົາຊະນະຝູງສັດຕູຂອງພຣະອົງແລ້ວ. ພຣະຄຳແຕ່ລະຂໍ້ຂອງພຣະເຈົ້າຈັບໃຈຂອງມະນຸດທຸກຄົນ. ມະນຸດຊາດທັງປວງລໍຖ້າຢ່າງຮ້ອນຮົນໃຫ້ພຣະເຈົ້າກ່າວພຣະທຳໃໝ່ຫຼາຍຂຶ້ນ, ຍ້ອນທຸກຄັ້ງທີ່ພຣະເຈົ້າກ່າວ ພຣະອົງໄດ້ສັ່ນຫົວໃຈຂອງມະນຸດຈົນເຖິງຮາກຂອງມັນ ແລະ ຍິ່ງໄປກວ່ານັ້ນ ພຣະອົງຈັດການ ແລະ ຄວບຄຸມທຸກການເຄື່ອນໄຫວ ແລະ ທຸກຄວາມຮູ້ສຶກຂອງມະນຸດ, ເພື່ອວ່າມະນຸດຊາດຈະເລີ່ມເພິ່ງພາ ແລະ ຍິ່ງໄປກວ່ານັ້ນ ແມ່ນເພື່ອເຊີດຊູພຣະທຳຂອງພຣະເຈົ້າ... ໃນວິທີນີ້, ຜູ້ຄົນຈຳນວນຫຼວງຫຼາຍໄດ້ລືມພຣະຄຳພີຢ່າງສິ້ນເຊີງໂດຍບໍ່ຮູ້ຕົວ ແລະ ເຖິງກັບຍອມຮັບສາລະພາບຕໍ່ຄຳເທດສະໜາ ແລະ ບົດຂຽນທີ່ຫຼ້າສະໄໝຂອງບຸກຄົນຝ່າຍວິນຍານ, ເພາະພວກເຂົາບໍ່ສາມາດຄົ້ນພົບພື້ນຖານໃດເລີຍສຳລັບພຣະທຳເຫຼົ່ານີ້ຂອງພຣະເຈົ້າໃນບົດຂຽນຜ່ານມາ ຫຼື ພວກເຂົາບໍ່ສາມາດຄົ້ນພົບຈຸດປະສົງຂອງພຣະເຈົ້າໃນການກ່າວພຣະຄຳເຫຼົ່ານີ້ໃນທຸກບ່ອນ. ເມື່ອເປັນເຊັ່ນນີ້, ອີກຫຼາຍສໍ່າໃດທີ່ຈະເຮັດໃຫ້ມະນຸດຊາດຕ້ອງຍອມຮັບວ່າພຣະຄຳເຫຼົ່ານີ້ແມ່ນສຽງຂອງພຣະເຈົ້າທີ່ບໍ່ໄດ້ເຫັນ ຫຼື ໄດ້ຍິນມາກ່ອນນັບຕັ້ງແຕ່ຕອນເລີ່ມຕົ້ນ, ພວກມັນຢູ່ເໜືອການຢັ່ງເຖິງຂອງທຸກຄົນທີ່ເຊື່ອໃນພຣະເຈົ້າ ແລະ ພວກມັນຢູ່ເໜືອທຸກສິ່ງທີ່ບຸກຄົນຝ່າຍວິນຍານໄດ້ກ່າວໃນຍຸກຕ່າງໆທີ່ຜ່ານມາ ຫຼື ພຣະຄຳໃນອະດີດຂອງພຣະເຈົ້າ. ເມື່ອຖືກກະຕຸ້ນໂດຍພຣະຄຳທຸກຂໍ້ເຫຼົ່ານີ້, ມະນຸດຊາດກໍໄດ້ເຂົ້າສູ່ລັດສະໝີແຫ່ງພາລະກິດຂອງພຣະວິນຍານບໍລິສຸດໂດຍບໍ່ຮູ້ຕົວ, ເຂົ້າສູ່ຊີວິດທີ່ຢູ່ໃນແຖວໜ້າຂອງຍຸກໃໝ່. ເມື່ອຖືກກະຕຸ້ນໂດຍພຣະທຳຂອງພຣະເຈົ້າ, ມະນຸດຊາດທີ່ເຕັມໄປດ້ວຍການຄາດຫວັງກໍໄດ້ຊີມລົດຊາດດ້ວຍຕົນເອງຄວາມຫວານຂອງການຖືກນຳພາດ້ວຍພຣະທຳຂອງພຣະເຈົ້າ. ເຮົາເຊື່ອວ່າ ຊ່ວງໄລຍະທີ່ຜ່ານໄປຢ່າງໄວນີ້ເປັນເວລາທີ່ມະນຸດທຸກຄົນຈະລະນຶກເຖິງດ້ວຍຄວາມຊົງຈຳຢ່າງຍາວນານ, ເມື່ອໃນຄວາມເປັນຈິງແລ້ວ ສິ່ງທີ່ມະນຸດຊາດໄດ້ຮັບໃນຊ່ວງເວລານີ້ບໍ່ໄດ້ເປັນຫຼາຍກວ່າລັດສະໝີແຫ່ງພາລະກິດຂອງພຣະວິນຍານບໍລິສຸດ ຫຼື ຄົນໆໜຶ່ງບໍ່ສາມາດເອີ້ນມັນວ່າລົດຊາດຫວານຂອງນໍ້າຕານທີ່ເຄືອບດ້ວຍເມັດຢາ. ນີ້ກໍຍ້ອນ ຈາກຈຸດນີ້ເປັນຕົ້ນໄປ ຍັງຢູ່ພາຍໃຕ້ການນຳພາແຫ່ງພຣະທຳຂອງພຣະເຈົ້າ, ຍັງຢູ່ພາຍໃຕ້ລັດສະໝີແຫ່ງພາລະກິດຂອງພຣະວິນຍານບໍລິສຸດ, ມະນຸດຊາດຖືກນຳພາເຂົ້າສູ່ອີກໄລຍະໜຶ່ງຂອງພຣະທຳຂອງພຣະເຈົ້າໂດຍບໍ່ຮູ້ຕົວ ເຊິ່ງເປັນບາດກ້າວທຳອິດຂອງພາລະກິດ ແລະ ພຣະຄຳຂອງພຣະເຈົ້າໃນຍຸກແຫ່ງອານາຈັກ ນັ້ນກໍຄື ການທົດລອງຂອງຜູ້ບໍລິການ.

ພຣະທຳທີ່ກ່າວກ່ອນການທົດລອງຂອງຜູ້ບໍລິການສ່ວນໃຫຍ່ແມ່ນຢູ່ໃນຮູບແບບການສັ່ງສອນ, ການຕັກເຕືອນ, ການຕິເຕືອນ ແລະ ການລົງວິໄນ ແລະ ໃນບາງແຫ່ງ ພຣະທຳເຫຼົ່ານັ້ນກໍໃຊ້ການກ່າວແບບດັ້ງເດີມທີ່ໃຊ້ໃນຍຸກແຫ່ງພຣະຄຸນ, ໂດຍໃຊ້ ຄຳວ່າ “ລູກຊາຍຂອງເຮົາ” ສຳລັບຄົນທີ່ຕິດຕາມພຣະເຈົ້າ ເພື່ອເຮັດໃຫ້ມັນງ່າຍຂຶ້ນສຳລັບມະນຸດຊາດທີ່ຈະຫຍັບເຂົ້າໃກ້ພຣະເຈົ້າ ຫຼື ເພື່ອວ່າມະນຸດຊາດ

ອາດຈະຖືວ່າຄວາມສຳພັນຂອງພວກເຂົາກັບພຣະເຈົ້າເປັນຄວາມສຳພັນທີ່ໃກ້ຊິດກັນ. ໃນວິທີນີ້ ບໍ່ວ່າພຣະເຈົ້າສະແດງການພິພາກສາຫຍັງກໍຕາມຕໍ່ຄວາມທະນົງຕົວ, ຄວາມອວດດີ ແລະ ອຸປະນິໄສອື່ນໆທີ່ເສື່ອມຊາມຂອງມະນຸດຊາດ, ມະນຸດກໍຈະສາມາດຈັດການ ແລະ ຍອມຮັບມັນໃນຖານະທີ່ເປັນ "ລູກຊາຍ" ຂອງເຂົາ, ໂດຍບໍ່ມີຄວາມເປັນປໍລະປັກຕໍ່ພຣະຄຳຂອງ "ພຣະເຈົ້າພຣະບິດາ", ນອກເໜືອຈາກນັ້ນ ສັນຍາທີ່ "ພຣະເຈົ້າພຣະບິດາ" ໄດ້ເຮັດໄວ້ກັບ "ລູກຊາຍ" ຂອງພຣະອົງແມ່ນບໍ່ມີຂໍ້ສົງໄສເລີຍ. ໃນລະຫວ່າງຊ່ວງເວລານີ້, ມະນຸດຊາດທັງປວງໄດ້ຮັບການເປັນຢູ່ໂດຍປາສະຈາກບັນຫາຄືກັນກັບການເປັນຢູ່ຂອງເດັກນ້ອຍອ່ອນ ແລະ ສິ່ງນີ້ກໍໄດ້ບັນລຸຈຸດປະສົງຂອງພຣະເຈົ້າ ເຊິ່ງນັ້ນກໍຄື ເມື່ອພວກເຂົາໄດ້ເຂົ້າສູ່ "ຄວາມເປັນຜູ້ໃຫຍ່", ພຣະອົງກໍຈະເລີ່ມສະແດງການພິພາກສາຕໍ່ພວກເຂົາ. ສິ່ງນີ້ຍັງໄດ້ວາງພື້ນຖານສຳລັບພາລະກິດແຫ່ງການພິພາກສາມະນຸດຊາດທີ່ພຣະເຈົ້າໄດ້ເລີ່ມຕົ້ນຢ່າງເປັນທາງການໃນຍຸກແຫ່ງອານາຈັກ. ເພາະພາລະກິດຂອງພຣະເຈົ້າໃນການບັງເກີດເປັນມະນຸດຄັ້ງນີ້ຫຼັກໆແມ່ນເພື່ອພິພາກສາ ແລະ ເອົາຊະນະມະນຸດຊາດທັງປວງ, ທັນທີທີ່ມະນຸດວາງຕີນຂອງເຂົາເທິງພື້ນດິນຢ່າງໝັ້ນຄົງ, ພຣະເຈົ້າກໍຈະເລີ່ມເຂົ້າສູ່ວິທີທາງຂອງພາລະກິດຂອງພຣະອົງທັນທີ ນັ້ນກໍຄື ພາລະກິດທີ່ພຣະອົງພິພາກສາມະນຸດ ແລະ ຂ້ຽນຕີເຂົາ. ເຫັນໄດ້ຢ່າງຈະແຈ້ງວ່າ ພຣະຄຳທຸກຂໍ້ກ່ອນການທົດລອງຜູ້ບໍລິການແມ່ນຖືກກ່າວອອກເພື່ອໃຫ້ຜ່ານພົ້ນການປ່ຽນແປງ, ຈຸດປະສົງທີ່ແທ້ຈິງແມ່ນມີຫຼາຍກວ່າທີ່ມັນປາກົດອອກ. ເຈດຕະນາອັນຮ້ອນຮົນຂອງພຣະເຈົ້າກໍຄື ພຣະອົງອາດຈະສາມາດເລີ່ມຕົ້ນພາລະກິດຂອງພຣະອົງໃນຍຸກແຫ່ງອານາຈັກຢ່າງເປັນທາງການ ໃຫ້ໄວເທົ່າທີ່ຈະໄວໄດ້. ບໍ່ມີທາງທີ່ພຣະອົງຈະປາຖະໜາສືບຕໍ່ຊັກຊວນມະນຸດຊາດໄປຂ້າງໜ້າໂດຍປ້ອນເມັດຢາທີ່ເຄືອບດ້ວຍນໍ້າຕານ; ກົງກັນຂ້າມພຣະອົງຮ້ອນຮົນທີ່ຈະເຫັນໃບໜ້າທີ່ແທ້ຈິງຂອງມະນຸດທຸກຄົນມາຢູ່ຕໍ່ໜ້າທີ່ນັ່ງແຫ່ງການພິພາກສາຂອງພຣະອົງ ແລະ ພຣະອົງຍິ່ງປາຖະໜາຢ່າງຮ້ອນຮົນຢ່າງຍິ່ງທີ່ຈະເຫັນທ່າທີທີ່ແທ້ຈິງທີ່ມະນຸດຊາດທັງປວງຈະມີຕໍ່ພຣະອົງຫຼັງຈາກທີ່ສູນເສຍພຣະຄຸນຂອງພຣະອົງ. ພຣະອົງພຽງປາຖະໜາຢາກເຫັນຜົນ, ບໍ່ແມ່ນຢາກເຫັນຂະບວນການ. ແຕ່ໃນເວລານັ້ນ ບໍ່ມີຜູ້ໃດເຂົ້າໃຈເຈດຕະນາອັນຮ້ອນຮົນຂອງພຣະເຈົ້າ, ເພາະວ່າ ຫົວໃຈຂອງມະນຸດກັງວົນພຽງແຕ່ກັບຈຸດໝາຍປາຍທາງຂອງເຂົາ ແລະ ຄວາມຄາດຫວັງໃນອະນາຄົດຂອງເຂົາ. ບໍ່ປະຫຼາດໃຈເລີຍທີ່ການພິພາກສາຂອງພຣະເຈົ້າແມ່ນແນໃສ່ມະນຸດຊາດທັງປວງຄັ້ງແລ້ວຄັ້ງເລົ່າ. ມີພຽງແຕ່ເມື່ອມະນຸດຊາດໄດ້ເລີ່ມຕົ້ນດຳລົງຊີວິດທີ່ປົກກະຕິຂອງມະນຸດໂດຍພາຍໃຕ້ການນຳພາຂອງພຣະເຈົ້າ, ທ່າທີຂອງພຣະເຈົ້າທີ່ມີຕໍ່ມະນຸດຊາດຈຶ່ງໄດ້ປ່ຽນ.

ປີ 1991 ແມ່ນປີທີ່ບໍ່ປົກກະຕິ; ໃຫ້ພວກເຮົາເອີ້ນປີນີ້ວ່າ "ປີທອງ". ພຣະເຈົ້າໄດ້ເລີ່ມຕົ້ນພາລະກິດໃໝ່ຂອງຍຸກແຫ່ງອານາຈັກ ແລະ ເນັ້ນພຣະຄຳຂອງພຣະອົງໃສ່ມະນຸດຊາດທັງປວງ. ໃນເວລາດຽວກັນ, ມະນຸດຊາດກໍໄດ້ຮັບຄວາມອົບອຸ່ນທີ່ບໍ່ເຄີຍມີມາກ່ອນ ແລະ ຍິ່ງໄປກວ່ານັ້ນ ແມ່ນໄດ້ຜະເຊີນກັບຄວາມເຈັບປວດຈາກການພິພາກຂອງພຣະເຈົ້າຕໍ່ສາມະນຸດແບບບໍ່ເຄີຍມີມາກ່ອນ. ມະນຸດຊາດໄດ້ຊີມລົດຊາດຄວາມຫວານທີ່ບໍ່ເຄີຍຮູ້ຈັກ ແລະ ຮູ້ສຶກມາກ່ອນ, ພ້ອມທັງລົດຊາດຂອງການພິພາກສາ ແລະ ການປະຖິ້ມທີ່ບໍ່ເຄີຍຮູ້ຈັກມາກ່ອນອີກດ້ວຍ, ຄືກັບວ່າພວກເຂົາໄດ້ຮັບເອົາ

ພຣະເຈົ້າ ແລະ ອີກຄັ້ງ ຄືກັບວ່າພວກເຂົາໄດ້ສູນເສຍພຣະເຈົ້າ. ການທົນທຸກໃນການຄອບຄອງ ແລະ ການທົນທຸກຕໍ່ຄວາມຍາກລຳບາກ, ຄວາມຮູ້ສຶກເຫຼົ່ານີ້ເປັນທີ່ຮູ້ຈັກຕໍ່ຄົນທີ່ໄດ້ຜະເຊີນພວກມັນເປັນການສ່ວນຕົວເທົ່ານັ້ນ; ມັນຄືສິ່ງທີ່ມະນຸດບໍ່ມີຄວາມສາມາດ ຫຼື ວິທີການທີ່ຈະບັນຍາຍໄດ້. ບາດແຜແບບນີ້ແມ່ນສິ່ງທີ່ພຣະເຈົ້າປະທານໃຫ້ແກ່ມະນຸດທຸກຄົນດັ່ງຮູບແບບຂອງປະສົບການ ແລະ ຊັບສິນທີ່ບໍ່ສາມາດຈັບຕ້ອງໄດ້. ຕາມຄວາມຈິງແລ້ວ ເນື້ອຫາຂອງພຣະຄຳທີ່ພຣະເຈົ້າໄດ້ກ່າວໃນປີນີ້ຕົກຢູ່ໃນສອງພາກສ່ວນໃຫຍ່: ພາກສ່ວນທຳອິດແມ່ນບ່ອນທີ່ພຣະເຈົ້າລົງສູ່ໂລກມະນຸດເພື່ອເຊີນຊວນມະນຸດຊາດໃຫ້ມາຢູ່ຕໍ່ໜ້າບັນລັງຂອງພຣະອົງໃນຖານະແຂກ; ພາກສ່ວນທີສອງແມ່ນໃນກໍລະນີທີ່ມະນຸດຊາດຖືກພຣະເຈົ້າໃຊ້ໃນຖານະຜູ້ບໍລິການ ຫຼັງຈາກໄດ້ກິນ ແລະ ດື່ມຈົນອີ່ມແລ້ວ. ແນ່ນອນ ມັນເຫັນໄດ້ຢ່າງຊັດເຈນວ່າ ພາກສ່ວນທຳອິດຄືຄວາມປາຖະໜາອັນມີຄ່າສູງສຸດ ແລະ ຢ່າງຈິງຈັງທີ່ສຸດຂອງມະນຸດຊາດ, ຍິ່ງໄປກວ່ານັ້ນກໍຍ້ອນມະນຸດໄດ້ສ້າງຄວາມເບີກບານຢ່າງຕິດນິໄສກັບທຸກສິ່ງທີ່ກ່ຽວກັບພຣະເຈົ້າໃຫ້ເປັນເປົ້າໝາຍແຫ່ງຄວາມເຊື່ອທີ່ພວກເຂົາມີໃນພຣະອົງຕັ້ງແຕ່ໃດມາ. ນີ້ຄືເຫດຜົນທີ່ເປັນຫຍັງ ທັນທີທີ່ພຣະເຈົ້າເລີ່ມຕົ້ນກ່າວພຣະຄຳຂອງພຣະອົງ, ມະນຸດຊາດຈຶ່ງລ້ວນແລ້ວແຕ່ກຽມພ້ອມທີ່ຈະເຂົ້າສູ່ອານາຈັກ ແລະ ລໍຖ້າຢູ່ທີ່ນັ້ນເພື່ອໃຫ້ພຣະເຈົ້າປະທານລາງວັນທີ່ແຕກຕ່າງກັນໃຫ້ແກ່ພວກເຂົາ. ຜູ້ຄົນທີ່ຢູ່ໃນສະຖານະການເຫຼົ່ານີ້ບໍ່ໄດ້ຈ່າຍລາຄາອັນເໝາະສົມ ໂດຍການປ່ຽນແປງອຸປະນິໄສຂອງພວກເຂົາ, ການສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າພໍໃຈ, ການຄຳນຶງເຖິງຄວາມປະສົງຂອງພຣະເຈົ້າ ແລະ ອື່ນໆອີກ. ໂດຍເບິ່ງແບບຜິວເຜີນແລ້ວ ມະນຸດເບິ່ງຄືວ່າວຸ້ນວາຍຢູ່ເລື້ອຍໆໃນຂະນະທີ່ພວກເຂົາເສຍສະຫຼະຕົນເອງ ແລະ ເຮັດວຽກເພື່ອພຣະເຈົ້າ, ໃນຂະນະທີ່ ຄວາມເປັນຈິງແລ້ວ ໃນສ່ວນລັບຂອງສ່ວນເລິກທີ່ສຸດຂອງຫົວໃຈພວກເຂົາ, ພວກເຂົາກຳລັງຄິດເຖິງບາດກ້າວຕໍ່ໄປທີ່ພວກເຂົາຄວນຍ່າງເພື່ອຮັບເອົາພອນ ຫຼື ເພື່ອປົກຄອງດັ່ງກະສັດ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ໃນຂະນະທີ່ຫົວໃຈຂອງມະນຸດກຳລັງຮັບເອົາພຣະເຈົ້າ, ໃນເວລາດຽວກັນພວກເຂົາກໍຄິດຄຳນວນກ່ຽວກັບພຣະເຈົ້າ. ມະນຸດຊາດທີ່ຢູ່ໃນສະພາບແບບນີ້ແມ່ນພົບກັບຄວາມກຽດຊັງ ແລະ ຄວາມລັງກຽດຂອງພຣະເຈົ້າ; ອຸປະນິໄສຂອງພຣະເຈົ້າຈະບໍ່ອົດກັ້ນຕໍ່ການທີ່ມະນຸດຫຼອກລວງ ຫຼື ໃຊ້ພຣະອົງ. ບໍ່ມີມະນຸດຄົນໃດສາມາດຢັ່ງເຖິງສະຕິປັນຍາຂອງພຣະເຈົ້າໄດ້. ມັນແມ່ນຢູ່ທ່າມກາງການອົດກັ້ນກັບການທົນທຸກເຫຼົ່ານີ້ທັງໝົດທີ່ພຣະອົງໄດ້ກ່າວສ່ວນທຳອິດຂອງພຣະຄຳຂອງພຣະອົງ. ພຣະເຈົ້າອົດກັ້ນກັບການທົນທຸກຫຼາຍສໍ່າໃດ ແລະ ພຣະອົງເສຍສະຫຼະຄວາມຫ່ວງໃຍ ແລະ ຄວາມຄິດຫຼາຍສໍ່າໃດໃນເວລານີ້, ບໍ່ມີມະນຸດຄົນໃດສາມາດຈິນຕະນາການໄດ້. ຈຸດປະສົງຂອງສ່ວນທຳອິດຂອງພຣະຄຳເຫຼົ່ານີ້ແມ່ນເພື່ອເປີດໂປງລັກສະນະທີ່ແຕກຕ່າງກັນຂອງຄວາມຂີ້ຮ້າຍທີ່ມະນຸດໄດ້ສະແດງອອກ ເມື່ອຜະເຊີນກັບຕຳແໜ່ງ ແລະ ຜົນປະໂຫຍດ ແລະ ເພື່ອເປີດໂປງຄວາມໂລພາ ແລະ ຄວາມຕໍ່າຊ້າຂອງມະນຸດ. ເຖິງແມ່ນວ່າ ໃນການກ່າວ ພຣະເຈົ້າໄດ້ກ່າວພຣະທຳຂອງພຣະອົງດ້ວຍນໍ້າສຽງທີ່ຈິງໃຈ ແລະ ຈິງຈັງຂອງແມ່ອັນເປັນທີ່ຮັກ, ຄວາມໂກດຮ້າຍທີ່ຢູ່ໃນສ່ວນເລິກທີ່ສຸດຂອງຫົວໃຈຂອງພຣະອົງແມ່ນເຜົາໄໝ້ຄືກັບດວງຕາເວັນໃນຕອນທ່ຽງ, ຄືກັບວ່າມັນຖືກແນໃສ່ສັດຕູຂອງພຣະອົງ. ພາຍໃຕ້ສະຖານະການໃດກໍຕາມ ພຣະເຈົ້າບໍ່ເຕັມໃຈທີ່ຈະກ່າວຕໍ່

ກຸ່ມຄົນທີ່ກຳລັງຂາດລັກສະນະທີ່ປົກກະຕິຂອງມະນຸດຊາດ ແລະ ດ້ວຍເຫດນັ້ນ ເມື່ອໃດກໍຕາມທີ່ພຣະອົງກ່າວ ພຣະອົງກໍຈະອົດກັ້ນຄວາມໂກດຮ້າຍທີ່ຢູ່ໃນຫົວໃຈຂອງພຣະອົງໄວ້, ໃນຂະນະດຽວກັນພຣະອົງກໍບັງຄັບໃຫ້ຕົນເອງກ່າວພຣະຄຳຂອງພຣະອົງ. ຍິ່ງໄປກວ່ານັ້ນ ພຣະອົງແມ່ນກ່າວຕໍ່ມະນຸດຊາດທີ່ປາສະຈາກຄວາມເປັນມະນຸດປົກກະຕິ, ໄຮ້ເຫດຜົນ, ເສື່ອມຊາມຈົນເຖິງທີ່ສຸດ, ໂດຍມີຄວາມໂລພາຝັງເລິກເປັນທຳມະຊາດອັນທີສອງຂອງພວກເຂົາ ແລະ ບໍ່ເຊື່ອຟັງ ແລະ ກະບົດຕໍ່ພຣະເຈົ້າຈົນເຖິງຈຸດຈົບຢ່າງຂົມຂື່ນ. ຄວາມເລິກທີ່ຊົນຊາດມະນຸດໄດ້ຕົກລົງສູ່ ແລະ ຂອບເຂດຂອງຄວາມລັງກຽດ ແລະ ຄວາມເບື່ອໜ່າຍຂອງພຣະເຈົ້າສຳລັບຊົນຊາດມະນຸດແມ່ນສາມາດຈິນຕະນາການໄດ້ຢ່າງງ່າຍດາຍ; ສິ່ງທີ່ຍາກທີ່ມະນຸດຊາດຈະຈິນຕະນາການໄດ້ກໍຄືຄວາມເຈັບປວດທີ່ພວກເຂົາໄດ້ສ້າງໃຫ້ກັບພຣະເຈົ້າ, ສິ່ງນັ້ນແມ່ນເປັນໄປບໍ່ໄດ້ທີ່ຈະບັນຍາຍດ້ວຍຄຳເວົ້າ. ແຕ່ມັນແມ່ນຍ້ອນເບື້ອງຫຼັງນີ້ແທ້ໆ ທີ່ບໍ່ມີຜູ້ໃດສາມາດຄົ້ນພົບວ່າຫົວໃຈຂອງພຣະເຈົ້າໄດ້ທົນທຸກແນວໃດ ແລະ ຍິ່ງໄປກວ່ານັ້ນ ບໍ່ມີຜູ້ໃດຄົ້ນພົບວ່າມະນຸດຊາດໄຮ້ເຫດຜົນ ແລະ ບໍ່ສາມາດແກ້ໄຂໄດ້ສໍ່າໃດ, ແຕ່ລະຄົນຈຶ່ງລະເລີຍໂດຍບໍ່ມີຢາງອາຍແມ່ນແຕ່ເລັກນ້ອຍ ຫຼື ຄວາມລັງເລໃຈແມ່ນແຕ່ໜ້ອຍດຽວວ່າ ພວກເຂົາມີສິດຂອງລູກຊາຍຂອງພຣະເຈົ້າທີ່ຈະໄດ້ຮັບລາງວັນທັງໝົດທີ່ພຣະອົງໄດ້ຈັດກຽມໄວ້ໃຫ້ແກ່ມະນຸດ, ຈົນເຖິງຈຸດທີ່ແຂ່ງຂັນກັນເອງໂດຍທີ່ບໍ່ມີຜູ້ໃດປາຖະໜາທີ່ຈະຕົກໄປຢູ່ຂ້າງຫຼັງ ແລະ ທຸກຄົນຢ້ານຢ່າງເລິກໆຕໍ່ການສູນເສຍ. ເຈົ້າຄວນຮູ້ໃນຕອນນີ້ວ່າ ຕຳແໜ່ງປະເພດໃດທີ່ຜູ້ຄົນໃນເວລານັ້ນມີໃນສາຍຕາຂອງພຣະເຈົ້າ. ຊົນຊາດເຊັ່ນນີ້ຈະສາມາດໄດ້ຮັບລາງວັນຂອງພຣະເຈົ້າໄດ້ແນວໃດ? ແຕ່ສິ່ງທີ່ມະນຸດໄດ້ຮັບຈາກພຣະເຈົ້າຄືຊັບສົມບັດທີ່ລ້ຳຄ່າທີ່ສຸດຕະຫຼອດເວລາ ແລະ ໃນທາງກົງກັນຂ້າມ ສິ່ງທີ່ພຣະເຈົ້າໄດ້ຮັບຈາກມະນຸດຄືຄວາມເຈັບປວດທີ່ສຸດ. ຕັ້ງແຕ່ການເລີ່ມຕົ້ນຂອງຄວາມສຳພັນລະຫວ່າງພຣະເຈົ້າ ແລະ ມະນຸດ, ນີ້ແມ່ນສິ່ງທີ່ມະນຸດໄດ້ຮັບຈາກພຣະເຈົ້າສະເໝີມາ ແລະ ນີ້ແມ່ນສິ່ງທີ່ເຂົາໄດ້ມອບໃຫ້ແກ່ພຣະເຈົ້າເປັນການຕອບແທນຢູ່ສະເໝີ.

ເຖິງແມ່ນວ່າ ພຣະເຈົ້າຈະເຜົາໄໝ້ໄປດ້ວຍຄວາມກັງວົນໃຈ, ເມື່ອພຣະອົງເຫັນຊົນຊາດຂອງມະນຸດນີ້ ທີ່ເສື່ອມຊາມຈົນເຖິງທີ່ສຸດ, ພຣະອົງບໍ່ມີທາງເລືອກ ນອກຈາກທີ່ຈະໂຍນພວກເຂົາຖິ້ມໃນທະເລແຫ່ງໄຟ ເພື່ອວ່າພວກເຂົາຈະຖືກຫຼໍ່ຫຼອມ. ນີ້ຄືສ່ວນທີສອງຂອງພຣະຄຳຂອງພຣະເຈົ້າ ເຊິ່ງພຣະເຈົ້າໄດ້ໃຊ້ມະນຸດຊາດໃຫ້ເປັນຜູ້ບໍລິການຂອງພຣະອົງ. ໃນສ່ວນນີ້, ພຣະເຈົ້າເລີ່ມຕົ້ນຈາກຄວາມອ່ອນໂຍນຈົນເຖິງຄວາມຮຸນແຮງ ແລະ ຈາກເລັກນ້ອຍຈົນເຖິງຈຳນວນຫຼາຍ, ໃນເລື່ອງຂອງວິທີການ ແລະ ໄລຍະເວລາ ແມ່ນໃຊ້ຕຳແໜ່ງ “ບຸກຄົນຂອງພຣະເຈົ້າ” ໃຫ້ເປັນເຫຍື່ອລໍ້ເພື່ອເປີດໂປງທຳມະຊາດທີ່ເສື່ອມຊາມຂອງມະນຸດ ໃນຂະນະດຽວກັນນັ້ນກໍນຳສະເໜີປະເພດທີ່ແຕກຕ່າງກັນຂອງ[ກ] ຜູ້ບໍລິການ, ປະຊາຊົນຂອງພຣະເຈົ້າ ແລະ ບຸດຊາຍຂອງພຣະເຈົ້າໃຫ້ມະນຸດຊາດໄດ້ເລືອກ. ແນ່ນອນ, ດັ່ງທີ່ພຣະເຈົ້າໄດ້ທຳນາຍໄວ້, ບໍ່ມີຜູ້ໃດເລືອກທີ່ຈະກາຍມາເປັນຜູ້ບໍລິການໃຫ້ກັບພຣະເຈົ້າ ແລະ ກົງກັນຂ້າມ

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ “ປະເພດທີ່ແຕກຕ່າງກັນຂອງ”.

ທຸກຄົນພະຍາຍາມທີ່ຈະກາຍມາເປັນບຸກຄົນຂອງພຣະເຈົ້າ. ເຖິງແມ່ນວ່າ ໃນລະຫວ່າງເວລານີ້ ຄວາມຮຸນແຮງທີ່ພຣະເຈົ້າກ່າວແມ່ນສິ່ງທີ່ມະນຸດບໍ່ເຄີຍຄາດການເລີຍ ແລະ ແຮງໄກທີ່ພວກເຂົາຈະເຄີຍໄດ້ຍິນ, ເຖິງຢ່າງໃດກໍຕາມ ເມື່ອກັງວົນກັບສະຖານະຫຼາຍເກີນໄປ ແລະ ນອກເໜືອກວ່າສິ່ງນີ້ ເມື່ອໝົກມຸ້ນຢູ່ກັບການໄດ້ຮັບພອນຢ່າງເອົາເປັນເອົາຕາຍ, ພວກເຂົາຈຶ່ງບໍ່ມີເວລາທີ່ຈະສ້າງແນວຄິດກ່ຽວກັບນໍ້າສຽງຂອງພຣະເຈົ້າໃນການກ່າວ ແລະ ວິທີກ່າວຂອງພຣະອົງ, ແຕ່ກົງກັນຂ້າມ ສະຖານະຂອງພວກເຂົາເອງ ແລະ ສິ່ງທີ່ຈະໄດ້ຮັບໃນອະນາຄົດແມ່ນຊັ່ງຊາຢູ່ໃນຄວາມຄິດຂອງພວກເຂົາຢູ່ສະເໝີ. ໃນວິທີນີ້, ມະນຸດຊາດຖືກພຣະຄຳຂອງພຣະເຈົ້ານຳໂດຍບໍ່ຮູ້ຕົວໄປສູ່ "ທາງສັບສົນ" ທີ່ພຣະອົງໄດ້ວາງໄວ້ໃຫ້ແກ່ພວກເຂົາ. ເມື່ອຖືກລໍ້ໂດຍເຫຍື່ອລໍ້ຂອງອະນາຄົດ ແລະ ໂຊກຊະຕາຂອງພວກເຂົາ ດ້ວຍຄວາມເຕັມໃຈ ຫຼື ບໍ່ກໍຕາມ, ມະນຸດຮູ້ວ່າຕົນເອງບໍ່ດີພໍທີ່ຈະກາຍມາເປັນບຸກຄົນຂອງພຣະເຈົ້າ ແລະ ເຖິງຢ່າງໃດກໍຕາມ ພວກເຂົາກໍບໍ່ເຕັມໃຈທີ່ຈະປະພຶດດັ່ງຜູ້ບໍລິການຂອງພຣະອົງ. ເມື່ອຕ້ອງເລືອກລະຫວ່າງຈິດໃຈທີ່ຂັດແຍ້ງກັນເຫຼົ່ານີ້, ພວກເຂົາກໍຍອມຮັບເອົາການພິພາກສາ ແລະ ການຂ້ຽນຕີທີ່ບໍ່ເຄີຍມີມາກ່ອນຢ່າງບໍ່ຮູ້ສຶກຕົວ ທີ່ພຣະເຈົ້າໄດ້ຈັດໄວ້ໃຫ້ມະນຸດຊາດ. ໂດຍທຳມະຊາດແລ້ວ ຮູບແບບຂອງການພິພາກສາ ແລະ ການຫຼໍ່ຫຼອມນີ້ແມ່ນສິ່ງທີ່ມະນຸດຊາດບໍ່ມີທາງເຕັມໃຈຈະຍອມຮັບໄດ້. ແຕ່ຢ່າງໃດກໍຕາມ, ມີພຽງພຣະເຈົ້າທີ່ມີສະຕິປັນຍາ ແລະ ມີພຽງພຣະອົງທີ່ມີລິດອຳນາດທີ່ຈະຮຽກຮ້ອງໃຫ້ຊົນຊາດມະນຸດທີ່ເສື່ອມຊາມນີ້ຍອມອ່ອນນ້ອມ, ເພື່ອວ່າພວກເຂົາທຸກຄົນຈະໄດ້ຍອມໃນທີ່ສຸດ ໂດຍເຕັມໃຈ ຫຼື ບໍ່ເຕັມໃຈກໍຕາມ. ມະນຸດຊາດບໍ່ມີທາງໃຫ້ເລືອກ. ມີພຽງແຕ່ພຣະເຈົ້າທີ່ມີອຳນາດຕັດສິນໃຈ ແລະ ມີພຽງແຕ່ພຣະເຈົ້າທີ່ສາມາດໃຊ້ວິທີການເຊັ່ນນີ້ເພື່ອປະທານຄວາມຈິງ ແລະ ຊີວິດໃຫ້ແກ່ມະນຸດ ແລະ ສະແດງທິດທາງໃຫ້ແກ່ເຂົາ. ວິທີການນີ້ຄືການປະຕິບັດພາລະກິດຂອງພຣະເຈົ້າໃນມະນຸດທີ່ບໍ່ສາມາດຫຼີກເວັ້ນໄດ້ ແລະ ມັນຍັງເປັນຄວາມຈຳເປັນທີ່ຂາດບໍ່ໄດ້ຂອງມະນຸດອີກດ້ວຍ ເຊິ່ງຢູ່ນອກເໜືອຂໍ້ສົງໄສ ຫຼື ຂໍ້ໂຕ້ແຍ້ງ. ພຣະເຈົ້າກ່າວ ແລະ ປະຕິບັດພາລະກິດໃນວິທີການດັ່ງກ່າວເພື່ອສື່ຂໍ້ແທ້ຈິງນີ້ໃຫ້ແກ່ມະນຸດຊາດ: ໃນການຊ່ວຍມະນຸດຊາດໃຫ້ລອດພົ້ນ, ພຣະເຈົ້າແມ່ນເຮັດຈາກຄວາມຮັກ ແລະ ຄວາມເມດຕາຂອງພຣະອົງ ແລະ ເພື່ອການຄຸ້ມຄອງຂອງພຣະອົງ; ໃນການຮັບເອົາຄວາມລອດພົ້ນຂອງພຣະເຈົ້າ, ມະນຸດຊາດຮັບເອົາ ຍ້ອນວ່າມັນໄດ້ຕົກລົງຈົນເຖິງຈຸດທີ່ພຣະເຈົ້າບໍ່ສາມາດເຮັດຫຍັງໄດ້ ນອກຈາກກ່າວເປັນການສ່ວນຕົວ. ເມື່ອມະນຸດຮັບເອົາຄວາມລອດພົ້ນຂອງພຣະເຈົ້າ, ນີ້ແມ່ນພຣະຄຸນທີ່ຍິ່ງໃຫຍ່ທີ່ສຸດ ແລະ ມັນຍັງເປັນຄວາມພູມໃຈທີ່ພິເສດ; ນັ້ນໝາຍຄວາມວ່າ ຖ້າບໍ່ແມ່ນຍ້ອນພຣະເຈົ້າກ່າວພຣະຄຳຂອງພຣະອົງດ້ວຍຕົນເອງ, ໂຊກຊະຕາຂອງມະນຸດຊາດກໍຈະດັບສູນໄປ. ໃນຂະນະທີ່ພຣະອົງກຽດຊັງມະນຸດຊາດ, ພຣະເຈົ້າຍັງກຽມພ້ອມ ແລະ ເຕັມໃຈທີ່ຈະຈ່າຍລາຄາໃດກໍຕາມເພື່ອຄວາມລອດພົ້ນຂອງມະນຸດ. ໃນຂະນະທີ່ມະນຸດເວົ້າຊໍ້າແລ້ວຊໍ້າອີກເຖິງຄວາມຮັກຂອງເຂົາສຳລັບພຣະເຈົ້າ ແລະ ວິທີທີ່ເຂົາອຸທິດທຸກສິ່ງໃຫ້ແກ່ພຣະເຈົ້າ, ເຂົາກໍກຳລັງກະບົດຕໍ່ພຣະເຈົ້າ ແລະ ຂູດຮີດພຣະຄຸນທຸກປະເພດຈາກພຣະເຈົ້າ ແລະ ເຖິງກັບທຳຮ້າຍພຣະເຈົ້າ ແລະ ສ້າງຄວາມເຈັບປວດໃນຫົວໃຈຂອງພຣະເຈົ້າຢ່າງບໍ່ສາມາດບັນຍາຍໄດ້. ສິ່ງດັ່ງກ່າວຄືຄວາມແຕກຕ່າງຢ່າງຊັດເຈນຂອງ

ຄວາມບໍ່ເຫັນແກ່ຕົວ ແລະ ຄວາມເຫັນແກ່ຕົວລະຫວ່າງພຣະເຈົ້າ ແລະ ມະນຸດ!

ໃນການປະຕິບັດພາລະກິດ ແລະ ການກ່າວ, ພຣະເຈົ້າບໍ່ໄດ້ຖືກບີບບັງຄັບໃຫ້ປະຕິບັດຕາມວິທີການໃດໜຶ່ງ, ແຕ່ບັນລຸຜົນຕາມເປົ້າໝາຍຂອງພຣະອົງເອງ. ຍ້ອນເຫດຜົນນີ້, ໃນສ່ວນນີ້ຂອງພຣະຄໍາຂອງພຣະອົງ, ພຣະເຈົ້າຈຶ່ງເຮັດໃຫ້ມັນເປັນປະເດັນທີ່ຈະບໍ່ເປີດເຜີຍຕົວຕົນຂອງພຣະອົງເອງຢ່າງຊັດເຈນ, ພຽງແຕ່ເປີດເຜີຍສອງສາມປະເດັນ ເຊັ່ນ: "ພຣະຄຣິດແຫ່ງຍຸກສຸດທ້າຍ" "ເຈົ້ານາຍແຫ່ງຈັກກະວານ" ແລະ ອື່ນໆອີກ. ສິ່ງນີ້ບໍ່ມີທາງກະທົບຕໍ່ພັນທະກິດຂອງພຣະຄຣິດ ຫຼື ຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າ, ໂດຍສະເພາະແມ່ນນັບຕັ້ງແຕ່ທີ່ມະນຸດຊາດໃນສະໄໝຕົ້ນໆເຫຼົ່ານັ້ນບໍ່ຮູ້ເຖິງແນວຄວາມຄິດກ່ຽວກັບ "ພຣະຄຣິດ" ແລະ "ການບັງເກີດເປັນມະນຸດ" ຢ່າງສິ້ນເຊີງ, ຈົນພຣະເຈົ້າຕ້ອງໄດ້ຖ່ອມພຣະອົງເອງເປັນບຸກຄົນທີ່ມີ "ໜ້າທີ່ພິເສດ" ເພື່ອກ່າວພຣະຄໍາຂອງພຣະອົງ. ນີ້ຄືຄວາມຫ່ວງໃຍ ແລະ ຄວາມຄິດອັນພາກພຽນຂອງພຣະເຈົ້າ, ຍ້ອນຜູ້ຄົນໃນເວລານັ້ນພຽງແຕ່ສາມາດຍອມຮັບເອົາຮູບແບບຂອງການຮຽກເອີ້ນນີ້. ບໍ່ວ່າພຣະເຈົ້າຈະໃຊ້ການຮຽກເອີ້ນໃນຮູບແບບໃດກໍຕາມ, ຜົນຂອງພາລະກິດຂອງພຣະອົງກໍບໍ່ໄດ້ຮັບຜົນກະທົບ, ຍ້ອນໃນທຸກສິ່ງທີ່ພຣະອົງເຮັດ ພຣະເຈົ້າມີວັດຖຸປະສົງທີ່ຈະເຮັດໃຫ້ມະນຸດສາມາດປ່ຽນແປງ, ເຮັດໃຫ້ມະນຸດສາມາດໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ. ບໍ່ວ່າພຣະອົງຈະເຮັດຫຍັງກໍຕາມ, ພຣະເຈົ້າແມ່ນມີຄວາມຕ້ອງການຂອງມະນຸດໃນຄວາມຄິດຢູ່ສະເໝີ. ນີ້ຄືເຈດຕະນາທີ່ຢູ່ເບື້ອງຫຼັງການປະຕິບັດພາລະກິດ ແລະ ການກ່າວຂອງພຣະເຈົ້າ. ເຖິງແມ່ນພຣະເຈົ້າລະມັດລະວັງຫຼາຍໃນການພິຈາລະນາທຸກລັກສະນະຂອງມະນຸດຊາດ ແລະ ມີສະຕິປັນຍາຢ່າງຫຼວງຫຼາຍໃນທຸກສິ່ງທີ່ພຣະອົງໄດ້ກະທໍາ, ເຮົາສາມາດເວົ້າສິ່ງນີ້ໄດ້ວ່າ: ຖ້າພຣະເຈົ້າບໍ່ໄດ້ເປັນພະຍານໃຫ້ກັບພຣະອົງເອງ, ຈະບໍ່ມີຜູ້ໃດໃນບັນດາຊົນຊາດມະນຸດທີ່ຖືກສ້າງຂຶ້ນສາມາດຮັບຮູ້ພຣະເຈົ້າເອງ ຫຼື ລຸກຂຶ້ນເປັນພະຍານໃຫ້ກັບພຣະເຈົ້າເອງໄດ້. ຖ້າພຣະເຈົ້າສືບຕໍ່ໃຊ້ "ບຸກຄົນທີ່ມີໜ້າທີ່ພິເສດ" ເພື່ອກ່າວໃນພາລະກິດຂອງພຣະອົງ, ຈະບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ສາມາດຖືວ່າພຣະເຈົ້າເປັນພຣະເຈົ້າ, ນີ້ຄືຄວາມໂສກເສົ້າຂອງມະນຸດຊາດ. ນັ້ນໝາຍຄວາມວ່າ ໃນບັນດາຊົນເຜົ່າຂອງມະນຸດທີ່ຖືກສ້າງ ບໍ່ມີຜູ້ໃດທີ່ສາມາດຮູ້ຈັກພຣະເຈົ້າໄດ້, ແຮງໄກທີ່ຈະມີຜູ້ໃດຮັກພຣະເຈົ້າ, ຫ່ວງໃຍພຣະເຈົ້າ ແລະ ຫຍັບເຂົ້າໃກ້ພຣະເຈົ້າ. ຄວາມເຊື່ອຂອງມະນຸດແມ່ນເພື່ອເຫັນແກ່ການໄດ້ຮັບພອນພຽງຢ່າງດຽວ. ຕົວຕົນຂອງພຣະເຈົ້າດັ່ງບຸກຄົນທີ່ມີໜ້າທີ່ພິເສດໄດ້ໃຫ້ຂໍ້ຄຶດແກ່ມະນຸດທຸກຄົນ: ມະນຸດຊາດພົບວ່າມັນງ່າຍທີ່ຈະຮັບເອົາພຣະເຈົ້າສໍາລັບບຸກຄົນທີ່ຢູ່ໃນບັນດາຊົນເຜົ່າຂອງມະນຸດທີ່ຖືກສ້າງ; ຄວາມເຈັບປວດ ແລະ ຄວາມອັບອາຍທີ່ໃຫຍ່ຫຼວງທີ່ສຸດທີ່ມະນຸດຊາດໄດ້ສ້າງໃຫ້ແກ່ພຣະເຈົ້າກໍຄື ເມື່ອພຣະອົງປາກົດ ຫຼື ປະຕິບັດພາລະກິດຢ່າງເປີດເຜີຍ, ພຣະເຈົ້າກໍຍັງຖືກມະນຸດປະຕິເສດ ແລະ ເຖິງກັບຖືກເຂົາລືມ. ພຣະເຈົ້າອົດກັ້ນກັບຄວາມອັບອາຍທີ່ຍິ່ງໃຫຍ່ທີ່ສຸດເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ; ໃນການໃຫ້ທຸກສິ່ງ, ຈຸດປະສົງຂອງພຣະອົງແມ່ນເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ, ເພື່ອຮັບເອົາການຍອມຮັບຂອງມະນຸດຊາດ. ລາຄາທີ່ພຣະເຈົ້າຈ່າຍສໍາລັບທຸກສິ່ງນີ້ແມ່ນສິ່ງທີ່ທຸກຄົນທີ່ມີຄວາມສໍານຶກຄວນສາມາດເຫັນຄຸນຄ່າໄດ້. ມະນຸດຊາດໄດ້ຮັບເອົາພຣະຄໍາ ແລະ ພາລະກິດຂອງພຣະເຈົ້າ ແລະ ໄດ້ຮັບເອົາ

ຄວາມລອດພົ້ນຂອງພຣະເຈົ້າ. ໃນເວລາດຽວກັນ, ບໍ່ມີຜູ້ໃດມີຄວາມຄິດທີ່ຈະຖາມສິ່ງນີ້ເລີຍ: ແມ່ນຫຍັງຄືສິ່ງທີ່ພຣະເຈົ້າໄດ້ຮັບຈາກມະນຸດຊາດ? ຈາກພຣະຄຳແຕ່ລະຂໍ້ຂອງພຣະເຈົ້າ, ມະນຸດຊາດໄດ້ຮັບເອົາຄວາມຈິງ, ໄດ້ສຳເລັດໃນການປ່ຽນແປງ, ໄດ້ຄົ້ນພົບທິດທາງໃນຊີວິດ; ແຕ່ສິ່ງທີ່ພຣະເຈົ້າໄດ້ຮັບຄືຄຳເວົ້າທີ່ມະນຸດຊາດໃຊ້ເພື່ອສະແດງຄວາມເປັນໜີ້ບຸນຄຸນຂອງພວກເຂົາຕໍ່ພຣະເຈົ້າ ແລະ ຄຳສັນລະເສີນຄ່ອຍໆພຽງສອງສາມຄຳ. ແນ່ນອນ ນີ້ບໍ່ແມ່ນການຕອບແທນທີ່ພຣະເຈົ້າຮຽກຮ້ອງຈາກມະນຸດແມ່ນບໍ?

ເຖິງແມ່ນວ່າໃນຕອນນີ້ ພຣະຄຳຫຼາຍຂໍ້ຂອງພຣະເຈົ້າໄດ້ຖືກກ່າວອອກມາ, ແຕ່ ຜູ້ຄົນສ່ວນໃຫຍ່ແມ່ນຍັງຄ້າງຢູ່ໃນຂັ້ນຕອນທີ່ພຣະທຳຂອງພຣະເຈົ້າໄດ້ເປັນຕົວແທນໃນເບື້ອງຕົ້ນເຖິງຄວາມຮູ້ ແລະ ຄວາມເຂົ້າໃຈຂອງພວກເຂົາກ່ຽວກັບພຣະເຈົ້າ ເຊິ່ງເຮັດໃຫ້ພວກເຂົາບໍ່ໄດ້ກ້າວໄປຂ້າງໜ້າ, ນີ້ຄືຫົວຂໍ້ທີ່ເຈັບປວດຢ່າງແທ້ຈິງ. ພາກສ່ວນນີ້ຂອງ “ພຣະຄຳຂອງພຣະຄຣິດໃນຕົ້ນເດີມ” ເປັນພຽງກະແຈເພື່ອເປີດຫົວໃຈຂອງມະນຸດອອກ; ການຢຸດພັກໃນທີ່ນີ້ຄືການບໍ່ສຳເລັດໃນການປະຕິບັດຕາມເຈດຕະນາຂອງພຣະເຈົ້າ. ຈຸດປະສົງຂອງພຣະເຈົ້າໃນການກ່າວພາກສ່ວນນີ້ຂອງພຣະຄຳຂອງພຣະອົງແມ່ນເພື່ອນຳມະນຸດຊາດຈາກຍຸກແຫ່ງພຣະຄຸນໄປສູ່ຍຸກແຫ່ງອານາຈັກ; ບໍ່ມີທາງທີ່ພຣະອົງຈະປາຖະໜາໃຫ້ມະນຸດຊາດຄ້າງຢູ່ໃນພາກສ່ວນນີ້ຂອງພຣະຄຳຂອງພຣະອົງ ຫຼື ແມ່ນແຕ່ຮັບເອົາສ່ວນນີ້ຂອງພຣະຄຳຂອງພຣະອົງເປັນຄູ່ມື, ບໍ່ດັ່ງນັ້ນ ພຣະຄຳໃນອະນາຄົດຂອງພຣະເຈົ້າກໍຈະບໍ່ຈຳເປັນ ຫຼື ບໍ່ມີຄວາມໝາຍ. ຖ້າມີຜູ້ໃດກໍຕາມທີ່ຍັງບໍ່ສາມາດເຂົ້າສູ່ສິ່ງທີ່ພຣະເຈົ້າຮຽກຮ້ອງໃຫ້ມະນຸດບັນລຸໄດ້ໃນສ່ວນນີ້ຂອງພຣະຄຳຂອງພຣະອົງ, ແລ້ວທາງເຂົ້າຂອງບຸກຄົນນັ້ນກໍຍັງຄົງບໍ່ເປັນທີ່ຮູ້ຈັກ. ສ່ວນນີ້ຂອງພຣະຄຳຂອງພຣະເຈົ້າປະກອບມີເງື່ອນໄຂທີ່ເປັນພື້ນຖານທີ່ສຸດທີ່ພຣະເຈົ້າໄດ້ຮຽກຮ້ອງຈາກມະນຸດໃນຍຸກແຫ່ງອານາຈັກ ແລະ ມັນເປັນພຽງວິທີດຽວທີ່ມະນຸດຊາດຈະໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໄດ້. ຖ້າເຈົ້າເປັນບຸກຄົນທີ່ບໍ່ເຂົ້າໃຈຫຍັງເລີຍ, ແລ້ວທາງທີ່ດີເຈົ້າຄວນເລີ່ມຕົ້ນດ້ວຍການອ່ານພຣະທຳໃນພາກສ່ວນນີ້.

# ບົດທີ 1

ຄຳສັນລະເສີນໄດ້ມາເຖິງພູເຂົາຊີໂອນ ແລະ ບ່ອນຢູ່ອາໄສຂອງພຣະເຈົ້າກໍໄດ້ປາກົດຂຶ້ນ. ນາມບໍລິສຸດອັນສະຫງ່າລາສີທີ່ທຸກຄົນສັນລະເສີນນັ້ນໄດ້ແຜ່ຂະຫຍາຍອອກ. ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ເຈົ້ານາຍແຫ່ງຈັກກະວານ, ພຣະຄຣິດແຫ່ງຍຸກສຸດທ້າຍ, ພຣະອົງຄືດວງຕາເວັນສ່ອງແສງເຫຼືອງເຫຼື້ອມຢູ່ເທິງພູເຂົາຊີໂອນ ເຊິ່ງເປັ່ງປະກາຍໄປດ້ວຍຄວາມສະຫງ່າຜ່າເຜີຍ ແລະ ຄວາມສະຫງ່າງາມທົ່ວຈັກກະວານທັງປວງ...

ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພວກຂ້ານ້ອຍເອີ້ນຫາພຣະອົງດ້ວຍຄວາມຕື່ນເຕັ້ນຕັນໃຈ; ພວກຂ້ານ້ອຍເຕັ້ນລຳ ແລະ ຮ້ອງເພງ. ພຣະອົງເປັນພຣະຜູ້ໄຖ່ຂອງພວກຂ້ານ້ອຍແທ້ໆ, ເປັນກະສັດອົງຍິ່ງໃຫຍ່ແຫ່ງຈັກກະວານ! ພຣະອົງໄດ້ສ້າງກຸ່ມຜູ້ຊະນະ ແລະ ບັນລຸແຜນການຄຸ້ມຄອງຂອງພຣະເຈົ້າ. ທຸກຄົນຈະຫຼັ່ງໄຫຼໄປສູ່ພູເຂົານີ້. ທຸກຄົນຈະຄຸເຂົ່າລົງຕໍ່ໜ້າບັນລັງ! ພຣະອົງເປັນພຣະເຈົ້າທີ່ແທ້ຈິງພຽງອົງດຽວເທົ່ານັ້ນ ແລະ ພຣະອົງສົມຄວນໄດ້ຮັບສະຫງ່າລາສີ ແລະ ກຽດຕິຍົດ. ສະຫງ່າລາສີ, ຄຳສັນລະເສີນ ແລະ ສິດອຳນາດທັງໝົດຈົ່ງມີແກ່ບັນລັງ! ນໍ້າພຸແຫ່ງຊີວິດຈະຫຼັ່ງໄຫຼອອກຈາກບັນລັງ, ຫົດນໍ້າ ແລະ ລໍ່ລ້ຽງຜູ້ຄົນຈຳນວນຫຼວງຫຼາຍຂອງພຣະເຈົ້າ. ຊີວິດປ່ຽນແປງໃນແຕ່ລະມື້; ແສງສະຫວ່າງ ແລະ ການເປີດເຜີຍໃໝ່ຕິດຕາມພວກເຮົາ, ໃຫ້ຄວາມເຂົ້າໃຈໃໝ່ກ່ຽວກັບພຣະເຈົ້າຢ່າງຕໍ່ເນື່ອງ. ໃນທ່າມກາງປະສົບການ, ພວກເຮົາໄດ້ມາເຖິງຄວາມໝັ້ນໃຈຢ່າງສົມບູນກ່ຽວກັບພຣະເຈົ້າ. ພຣະທຳຂອງພຣະອົງຖືກເຮັດໃຫ້ປະຈັກແຈ້ງຕະຫຼອດເວລາ, ເຮັດໃຫ້ປະຈັກແຈ້ງພາຍໃນຄົນທີ່ຖືກຕ້ອງ. ພວກເຮົາໄດ້ຮັບພອນຫຼາຍແທ້ໆ! ພົບກັບພຣະເຈົ້າເຊິ່ງໜ້າໃນແຕ່ລະມື້, ສື່ສານກັບພຣະເຈົ້າກ່ຽວກັບທຸກສິ່ງ ແລະ ມອບອຳນາດອະທິປະໄຕເໜືອທຸກສິ່ງໃຫ້ແກ່ພຣະເຈົ້າ. ພວກເຮົາໄຕ່ຕອງພຣະທຳຂອງພຣະເຈົ້າຢ່າງລະມັດລະວັງ, ຫົວໃຈຂອງພວກເຮົາມີຄວາມສະຫງົບໃນພຣະເຈົ້າ ແລະ ດ້ວຍເຫດນັ້ນ ພວກເຮົາຈຶ່ງມາຢູ່ຕໍ່ໜ້າພຣະເຈົ້າ, ບ່ອນທີ່ພວກເຮົາໄດ້ຮັບແສງສະຫວ່າງຂອງພຣະອົງ. ທຸກໆມື້, ໃນຊີວິດ, ການກະທຳ, ພຣະທຳ, ຄວາມຄິດ ແລະ ແນວຄິດຂອງພວກເຮົາ, ພວກເຮົາດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ, ສາມາດແຍກແຍະໄດ້ຕະຫຼອດເວລາ. ພຣະທຳຂອງພຣະເຈົ້ານຳພາເສັ້ນຝ້າຍຜ່ານຮູເຂັມ; ໂດຍບໍ່ຄາດຄິດ ສິ່ງຕ່າງໆທີ່ລີ້ລັບຢູ່ໃນພວກເຮົາກໍເກີດມີແສງສະຫວ່າງຕາມໆກັນມາ. ການສົນທະນາກັບພຣະເຈົ້າບໍ່ໃຫ້ມີການຊັກຊ້າ; ຄວາມຄິດ ແລະ ແນວຄິດຂອງພວກເຮົາຖືກເປີດເຜີຍອອກໂດຍພຣະເຈົ້າ. ໃນທຸກຊ່ວງເວລາ ພວກເຮົາແມ່ນດຳລົງຊີວິດຢູ່ຕໍ່ໜ້າບັນລັງຂອງພຣະຄຣິດ ບ່ອນທີ່ພວກເຮົາໄດ້ຜະເຊີນກັບການພິພາກສາ. ທຸກພາກສ່ວນໃນຮ່າງກາຍຂອງພວກເຮົາຍັງຄົງຖືກຍຶດຄອງໂດຍຊາຕານ. ມື້ນີ້, ເພື່ອທີ່ຈະຟື້ນຟູອຳນາດອະທິປະໄຕຂອງພຣະເຈົ້າ, ພຣະວິຫານຂອງພຣະອົງຕ້ອງຖືກຊຳລະລ້າງ. ເພື່ອທີ່ຈະຖືກຄອບຄອງໂດຍພຣະເຈົ້າຢ່າງສົມບູນ, ພວກເຮົາຕ້ອງຮ່ວມໃນການດີ້ນລົນຢ່າງເອົາເປັນເອົາຕາຍ. ມີແຕ່ເມື່ອຕົວຕົນດັ່ງເດີມຂອງພວກເຮົາຖືກຄຶງໃສ່ໄມ້ກາງແຂນເທົ່ານັ້ນ, ຊີວິດທີ່ຟື້ນຄືນມາຂອງພຣະຄຣິດຈຶ່ງຈະສາມາດປົກຄອງໄດ້ຢ່າງສູງສຸດ.

ບັດນີ້ ພຣະວິນຍານບໍລິສຸດໄດ້ລະດົມການໂຈມຕີໄປທຸກມຸມຂອງພວກເຮົາເພື່ອຕໍ່ສູ້ເພື່ອການຟື້ນຟູຂອງພວກເຮົາ. ຕາບໃດທີ່ພວກເຮົາພ້ອມທີ່ຈະປະຕິເສດຕົນເອງ ແລະ ເຕັມໃຈທີ່ຈະຮ່ວມມືກັບພຣະເຈົ້າ, ພຣະເຈົ້າຈະສ່ອງແສງສະຫວ່າງ ແລະ ຊຳລະລ້າງພວກເຮົາໃຫ້ບໍລິສຸດຈາກພາຍໃນຢູ່ຕະຫຼອດເວລາຢ່າງແນ່ນອນ ແລະ ຮຽກສິ່ງທີ່ຊາຕານໄດ້ຍຶດຄອງນັ້ນຄືນມາໃໝ່, ເພື່ອວ່າພຣະເຈົ້າຈະເຮັດໃຫ້ພວກເຮົາບໍລິບູນໄດ້ໄວເທົ່າທີ່ຈະເປັນໄປໄດ້. ຢ່າເສຍເວລາ, ໃຫ້ດຳລົງຊີວິດໃນທຸກຊ່ວງເວລາພາຍໃນພຣະທຳຂອງພຣະເຈົ້າ. ໃຫ້ກໍ່ຕົວຂຶ້ນກັບໄພ່ພົນ, ຖືກນຳເຂົ້າສູ່ອານາຈັກ ແລະ ເຂົ້າສູ່ສະຫງ່າລາສີຮ່ວມກັບພຣະເຈົ້າ.

# ບົດທີ 2

ຄຣິສຕະຈັກແຫ່ງຟີລາເດັນເຟຍໄດ້ກໍ່ຕົວຂຶ້ນ ເຊິ່ງກໍເນື່ອງຈາກຄວາມກະລຸນາ ແລະ ຄວາມເມດຕາຂອງພຣະເຈົ້າທັງສິ້ນ. ຄວາມຮັກສຳລັບພຣະເຈົ້າໄດ້ປາກົດຂຶ້ນໃນຫົວໃຈຂອງໄພ່ພົນຈຳນວນຫຼວງຫຼາຍ ຜູ້ທີ່ບໍ່ລັງເລໃຈໃນການເດີນທາງຝ່າຍວິນຍານຂອງພວກເຂົາ. ພວກເຂົາຍຶດໝັ້ນໃນຄວາມເຊື່ອຂອງພວກເຂົາທີ່ວ່າ ພຣະເຈົ້າທີ່ແທ້ຈິງອົງດຽວໄດ້ກາຍມາເປັນເນື້ອໜັງ, ພຣະອົງເປັນເຈົ້ານາຍແຫ່ງຈັກກະວານ, ເປັນຜູ້ບັນຊາການສິ່ງທັງປວງ: ພຣະວິນຍານບໍລິສຸດໄດ້ຢືນຢັນເຖິງສິ່ງນີ້, ມັນບໍ່ສາມາດເຄື່ອນຍ້າຍໄດ້ເຊັ່ນດຽວກັບພູເຂົາ! ແລ້ວມັນຈະບໍ່ປ່ຽນແປງຈັກເທື່ອ!

ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ມື້ນີ້ ແມ່ນພຣະອົງທີ່ໄດ້ເປີດຕາຝ່າຍວິນຍານຂອງພວກຂ້ານ້ອຍ, ປ່ອຍໃຫ້ຄົນຕາບອດໄດ້ເຫັນຮຸ່ງ, ໃຫ້ຄົນເປ້ຍຍ່າງໄດ້ ແລະ ຄົນຂີ້ທູດໄດ້ຮັບການຮັກສາ. ແມ່ນພຣະອົງທີ່ໄດ້ເປີດປ່ອງຢ້ຽມສູ່ສະຫວັນ, ເຮັດໃຫ້ພວກຂ້ານ້ອຍໄດ້ຮັບຮູ້ເຖິງຄວາມເລິກລັບແຫ່ງອານາຈັກຝ່າຍວິນຍານ. ເມື່ອຖືກຊຶມເຂົ້າໂດຍພຣະທຳອັນສັກສິດຂອງພຣະອົງ ແລະ ຖືກຊ່ວຍໃຫ້ລອດພົ້ນຈາກຄວາມເປັນມະນຸດຂອງພວກຂ້ານ້ອຍ ທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ, ສິ່ງດັ່ງກ່າວແມ່ນພາລະກິດອັນຍິ່ງໃຫຍ່ທີ່ປະເມີນຄ່າບໍ່ໄດ້ຂອງພຣະອົງ ແລະ ຄວາມເມດຕາອັນຍິ່ງໃຫຍ່ທີ່ປະເມີນຄ່າບໍ່ໄດ້ຂອງພຣະອົງ. ພວກຂ້ານ້ອຍເປັນພະຍານຂອງພຣະອົງ!

ພຣະອົງໄດ້ລີ້ລັບຢ່າງຖ່ອມຕົນ ແລະ ງຽບໆຕັ້ງແຕ່ດົນແລ້ວ. ພຣະອົງໄດ້ຜ່ານການຟື້ນຄືນມາຈາກຄວາມຕາຍ, ການທົນທຸກຈາກການຖືກຄຶງທີ່ໄມ້ກາງແຂນ, ຄວາມປິຕິຍິນດີ ແລະ ຄວາມໂສກເສົ້າຂອງຊີວິດມະນຸດ ແລະ ການຂົ່ມເຫັງ ແລະ ຄວາມລຳບາກຍາກແຄ້ນ; ພຣະອົງໄດ້ປະສົບ ແລະ ຊີມລົດຊາດຄວາມເຈັບປວດຂອງໂລກມະນຸດ ແລະ ພຣະອົງຖືກປະຖິ້ມໂດຍຍຸກດັ່ງກ່າວ. ພຣະເຈົ້າທີ່ບັງເກີດເປັນມະນຸດຄືພຣະເຈົ້າເອງ. ເພື່ອເຫັນແກ່ຄວາມປະສົງຂອງພຣະເຈົ້າ, ພຣະອົງໄດ້ຊ່ວຍພວກຂ້ານ້ອຍຈາກກອງຂີ້ເຫຍື້ອ, ຍົກພວກຂ້ານ້ອຍຂຶ້ນສູງດ້ວຍມືຂວາຂອງພຣະອົງ ແລະ ມອບພຣະຄຸນຂອງພຣະອົງໃຫ້ແກ່ພວກຂ້ານ້ອຍລ້າໆ. ພຣະອົງໄດ້ນຳຊີວິດຂອງພຣະອົງເຂົ້າມາໃນພວກຂ້ານ້ອຍໂດຍບໍ່ຫຼີກຫຼ່ຽງຄວາມເຈັບປວດ; ລາຄາທີ່ພຣະອົງໄດ້ຈ່າຍດ້ວຍເລືອດ, ເຫື່ອ ແລະ ນໍ້າຕາຂອງພຣະອົງແມ່ນຖືກຕີພະລຶກໄວ້ໃນໄພ່ພົນ. ພວກຂ້ານ້ອຍເປັນຜົນຜະລິດຂອງ[ກ] ຄວາມພະຍາຍາມອັນພາກພຽນຂອງພຣະອົງ; ພວກຂ້ານ້ອຍຄືລາຄາທີ່ພຣະອົງໄດ້ຊຳລະ.

ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ແມ່ນຍ້ອນຄວາມຮັກຄວາມເມດຕາ ແລະ ຄວາມກະລຸນາຂອງພຣະອົງ, ຄວາມຊອບທຳ ແລະ ຄວາມສະຫງ່າຜ່າເຜີຍຂອງພຣະອົງ, ຄວາມບໍລິສຸດ ແລະ ຄວາມຖ່ອມຕົນຂອງພຣະອົງ, ທຸກຄົນຈຶ່ງກົ້ມລົງຕໍ່ໜ້າພຣະອົງ ແລະ ນະມັດສະການພຣະອົງຕະຫຼອດໄປເປັນນິດ.

---

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ "ຜົນຜະລິດຂອງ".

ໃນມື້ນີ້ ພຣະອົງໄດ້ເຮັດໃຫ້ທຸກຄຣິສຕະຈັກສົມບູນແບບ, ຄຣິສຕະຈັກແຫ່ງຟີລາເດັນເຟຍ ແລະ ດ້ວຍເຫດນັ້ນກໍບັນລຸແຜນການຄຸ້ມຄອງ 6.000 ປີຂອງພຣະອົງ. ໄພ່ພົນສາມາດຍອມຕໍ່ພຣະອົງຢ່າງຖ່ອມຕົນ, ເຊື່ອມໂຍງດ້ວຍວິນຍານ ແລະ ຕິດຕາມດ້ວຍຄວາມຮັກ, ຮ່ວມເຂົ້າໃນແຫຼ່ງກຳເນີດຂອງນ້ຳພຸ. ນ້ຳແຫ່ງຊີວິດໄດ້ຫລັ່ງໄຫຼຢ່າງບໍ່ຢຸດເຊົາ, ຊຳລະລ້າງ ແລະ ກຳຈັດຂີ້ຕົມ ແລະ ນ້ຳສົກກະປົກທັງໝົດໃນຄຣິສຕະຈັກ, ຊຳລະລ້າງພຣະວິນຍານຂອງພຣະອົງໃຫ້ບໍລິສຸດອີກຄັ້ງ. ພວກຂ້ານ້ອຍໄດ້ມາຮູ້ຈັກພຣະເຈົ້າທີ່ແທ້ຈິງແທ້ໆ, ຍ່າງຢູ່ໃນພຣະທຳຂອງພຣະອົງ, ຮັບຮູ້ພາລະ ແລະ ໜ້າທີ່ຂອງພວກຂ້ານ້ອຍເອງ ແລະ ໄດ້ເຮັດທຸກສິ່ງທີ່ພວກຂ້ານ້ອຍສາມາດເຮັດໄດ້ເພື່ອເສຍສະຫຼະຕົນເອງເພື່ອເຫັນແກ່ຄຣິສຕະຈັກ. ເມື່ອຢູ່ຢ່າງງຽບໆຕໍ່ໜ້າພຣະອົງ, ພວກຂ້ານ້ອຍຕ້ອງເອົາໃຈໃສ່ກັບພາລະກິດຂອງພຣະວິນຍານບໍລິສຸດ, ບໍ່ໃຫ້ຄວາມປະສົງຂອງພຣະອົງຖືກຂັດຂວາງໃນພວກຂ້ານ້ອຍ. ໃນບັນດາໄພ່ພົນມີຄວາມຮັກກັນ ແລະ ກັນ ແລະ ຈຸດແຂງຂອງບາງຄົນຈະທົດແທນຄວາມລົ້ມເຫຼວຂອງຄົນອື່ນ. ພວກເຂົາສາມາດຍ່າງໃນວິນຍານຕະຫຼອດເວລາ, ຖືກສ່ອງແສງ ແລະ ເຍືອງທາງໂດຍພຣະວິນຍານບໍລິສຸດ. ພວກເຂົານຳຄວາມຈິງເຂົ້າສູ່ການປະຕິບັດທັນທີຫຼັງຈາກທີ່ເຂົ້າໃຈມັນ. ພວກເຂົາຕາມທັນແສງສະຫວ່າງໃໝ່ ແລະ ຕິດຕາມບາດກ້າວຂອງພຣະເຈົ້າ.

ຮ່ວມມືກັບພຣະເຈົ້າຢ່າງຫ້າວຫັນ; ການປ່ອຍໃຫ້ພຣະອົງຄວບຄຸມກໍຄືການຍ່າງກັບພຣະອົງ. ຄວາມຄິດ, ແນວຄິດ, ຄວາມຄິດເຫັນ ແລະ ຄວາມຫຍຸ້ງຍາກທາງໂລກທັງໝົດຂອງພວກຂ້ານ້ອຍໄດ້ຫາຍໄປໃນອາກາດອັນວ່າງເປົ່າຄືກັບຄວັນ. ພວກຂ້ານ້ອຍປ່ອຍໃຫ້ພຣະເຈົ້າປົກຄອງສູງສຸດໃນວິນຍານຂອງພວກຂ້ານ້ອຍ, ຍ່າງກັບພຣະອົງ ແລະ ຮັບເອົາຄວາມເປັນເລີດ, ເອົາຊະນະໂລກ ແລະ ວິນຍານຂອງພວກຂ້ານ້ອຍຈະບິນຢ່າງເປັນອິດສະຫຼະ ແລະ ຮັບເອົາການປົດປ່ອຍ: ນີ້ຄືຜົນຕາມມາ ເມື່ອພຣະເຈົ້າອົງຊົງລິດທານຸພາບສູງສຸດໄດ້ກາຍມາເປັນກະສັດ. ພວກຂ້ານ້ອຍຈະບໍ່ເຕັ້ນລຳ ແລະ ຮ້ອງເພງສັນລະເສີນ, ມອບຖວາຍຄຳສັນລະເສີນຂອງພວກຂ້ານ້ອຍ, ມອບຖວາຍເພງນະມັດສະການໃໝ່ໄດ້ແນວໃດ?

ແທ້ຈິງແລ້ວມີຫຼາຍວິທີທີ່ຈະສັນລະເສີນພຣະເຈົ້າ: ການຮ້ອງອອກເຖິງນາມຂອງພຣະອົງ, ການຫຍັບເຂົ້າໃກ້ພຣະອົງ, ການຄິດເຖິງພຣະອົງ, ການອະທິຖານ-ອ່ານ, ການເຂົ້າຮ່ວມໃນການສົນທະນາ, ການຕຶກຕ່ອງ ແລະ ການໄຕ່ຕອງ, ຄຳອະທິຖານ ແລະ ເພງສັນລະເສີນ. ໃນຄຳສັນລະເສີນປະເພດເຫຼົ່ານີ້ແມ່ນມີຄວາມມ່ວນຊື່ນ ແລະ ມີການທົດສົງ; ມີລິດອຳນາດໃນຄຳສັນລະເສີນ ແລະ ມີພາລະອີກດ້ວຍ. ມີຄວາມເຊື່ອໃນຄຳສັນລະເສີນ ແລະ ມີຄວາມເຂົ້າໃຈໃໝ່.

ຮ່ວມມືກັບພຣະເຈົ້າຢ່າງຫ້າວຫັນ, ປະສານງານໃນການຮັບໃຊ້ ແລະ ກາຍມາເປັນອັນໜຶ່ງດຽວກັນ, ປະຕິບັດຕາມເຈດຕະນາຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ, ຟ້າວກາຍມາເປັນຮ່າງກາຍອັນບໍລິສຸດຝ່າຍວິນຍານ, ຢຽບຢ່ຳຊາຕານ ແລະ ນຳຈຸດຈົບມາສູ່ໂຊກຊະຕາຂອງຊາຕານ. ຄຣິສຕະຈັກແຫ່ງຟີລາເດັນເຟຍໄດ້ຖືກຮັບຂຶ້ນເມືອສູ່ການສະຖິດຂອງພຣະເຈົ້າ ແລະ ຖືກເຮັດໃຫ້ເປັນທີ່ປະຈັກແຈ້ງໃນສະຫງ່າລາສີຂອງພຣະອົງ.

# ບົດທີ 3

ກະສັດທີ່ມີໄຊຊະນະນັ່ງຢູ່ເທິງບັນລັງອັນສະຫງ່າລາສີຂອງພຣະອົງ. ພຣະອົງໄດ້ສຳເລັດການໄຖ່ບາບ ແລະ ນຳພາປະຊາຊົນທຸກຄົນຂອງພຣະອົງໃຫ້ປາກົດດ້ວຍສະຫງ່າລາສີ. ພຣະອົງຈັບຈັກກະວານໄວ້ໃນມືຂອງພຣະອົງ ແລະ ດ້ວຍສະຕິປັນຍາ ແລະ ລິດທານຸພາບອັນສັກສິດຂອງພຣະອົງ, ພຣະອົງໄດ້ສ້າງ ແລະ ເຮັດໃຫ້ພູເຂົາຊີໂອນໝັ້ນຄົງ. ດ້ວຍລິດທານຸພາບຂອງພຣະອົງ, ພຣະອົງໄດ້ພິພາກສາໂລກທີ່ຜິດບາບ; ພຣະອົງໄດ້ພິພາກສາຊົນຊາດທັງໝົດ ແລະ ປະຊາຊົນທັງປວງ, ແຜ່ນດິນໂລກ ແລະ ທະເລ ແລະ ທຸກສິ່ງທີ່ມີຊີວິດໃນນັ້ນ, ພ້ອມທັງຜູ້ຄົນທີ່ເມົາເຫຼົ້າແວງແຫ່ງຕັນຫາ. ພຣະເຈົ້າຈະພິພາກສາພວກເຂົາຢ່າງແນ່ນອນ ແລະ ພຣະອົງຈະໃຈຮ້າຍກັບພວກເຂົາຢ່າງແນ່ນອນ ແລະ ໃນທີ່ນີ້ຈະເປີດເຜີຍເຖິງລິດທານຸພາບຂອງພຣະເຈົ້າ ຜູ້ເຊິ່ງພິພາກສາທັນທີ ແລະ ດຳເນີນການໂດຍບໍ່ຊັກຊ້າ. ໄຟແຫ່ງຄວາມໂກດຮ້າຍຂອງພຣະອົງຈະເຜົາໄໝ້ອາຊະຍາກຳທີ່ຊົ່ວຮ້າຍຂອງພວກເຂົາຢ່າງແນ່ນອນ ແລະ ຄວາມຫາຍະນະຈະເກີດຂຶ້ນກັບພວກເຂົາໄວໆນີ້; ພວກເຂົາຈະບໍ່ຮູ້ເສັ້ນທາງຫຼົບໜີ ແລະ ບໍ່ມີບ່ອນໃຫ້ລີ້, ພວກເຂົາຈະຮ້ອງໄຫ້ ແລະ ກັດແຂ້ວຂອງພວກເຂົາ ແລະ ພວກເຂົາຈະນຳຄວາມພິນາດມາສູ່ຕົນເອງ.

ລູກຊາຍທີ່ມີໄຊຊະນະ, ອັນເປັນທີ່ຮັກຂອງພຣະເຈົ້າຈະຢູ່ໃນພູເຂົາຊີໂອນຢ່າງແນ່ນອນ, ຈະບໍ່ຈາກບ່ອນນັ້ນໄປໃສຈັກເທື່ອ. ຜູ້ຄົນຈຳນວນຫຼວງຫຼາຍຈະຟັງສຽງຂອງພຣະອົງຢ່າງໃກ້ຊິດ, ພວກເຂົາຈະເອົາໃຈໃສ່ກັບການກະທຳຂອງພຣະອົງຢ່າງລະມັດລະວັງ ແລະ ສຽງແຫ່ງການສັນລະເສີນຂອງພວກເຂົາຈະບໍ່ຢຸດເຊົາຈັກເທື່ອ. ພຣະເຈົ້າທີ່ແທ້ຈິງອົງດຽວໄດ້ປາກົດຕົວແລ້ວ! ພວກເຮົາຕ້ອງໝັ້ນໃຈໃນພຣະອົງດ້ວຍຈິດວິນຍານ ແລະ ຕິດຕາມພຣະອົງຢ່າງໃກ້ຊິດ; ພວກເຮົາຈະຮີບໄປຂ້າງໜ້າດ້ວຍກຳລັງທັງໝົດຂອງພວກເຮົາ ແລະ ບໍ່ລັງເລອີກຕໍ່ໄປ. ຈຸດຈົບຂອງແຜ່ນດິນໂລກກຳລັງເປີດເຜີຍຕໍ່ໜ້າພວກເຮົາ; ບັດນີ້ ຊີວິດທີ່ຖືກຕ້ອງໃນຄຣິສຕະຈັກ ພ້ອມທັງຜູ້ຄົນ, ເລື່ອງຕ່າງໆ ແລະ ສິ່ງທີ່ຢູ່ອ້ອມຮອບພວກເຮົາກໍຍິ່ງເຮັດໃຫ້ການຝຶກຝົນຂອງພວກເຮົາຮຸນແຮງຂຶ້ນ. ໃຫ້ພວກເຮົາຟ້າວເອົາຄືນຫົວໃຈຂອງພວກເຮົາທີ່ຮັກໂລກຫຼາຍ! ໃຫ້ພວກເຮົາຟ້າວເອົາຄືນນິມິດຂອງພວກເຮົາທີ່ມືດມົວຫຼາຍ! ໃຫ້ພວກເຮົາຢູ່ໃນບາດກ້າວຂອງພວກເຮົາ ເພື່ອພວກເຮົາຈະບໍ່ເຮັດເກີນຂອບເຂດ. ໃຫ້ພວກເຮົາຫ້າມປາກຂອງພວກເຮົາເພື່ອວ່າພວກເຮົາຈະໄດ້ຍ່າງໃນພຣະທຳຂອງພຣະເຈົ້າ ແລະ ບໍ່ແຂ່ງຂັນເພື່ອຜົນໄດ້ ແລະ ຜົນເສຍຂອງພວກເຮົາເອງອີກຕໍ່ໄປ. ອ່າໆ, ປ່ອຍມັນໄປ: ຄວາມໂລບມາກໂລພາຂອງເຈົ້າສຳລັບທາງໂລກ ແລະ ສຳລັບຄວາມຮັ່ງມີ! ອ່າໆ, ໃຫ້ປົດປ່ອຍຕົນເອງຈາກສິ່ງນີ້: ຄວາມຮັກຫອມທີ່ເກາະຕິດສາມີ ແລະ ລູກສາວ ແລະ ລູກຊາຍຂອງເຈົ້າ! ອ່າໆ, ໃຫ້ຫັນຫຼັງຂອງເຈົ້າໃສ່ສິ່ງເຫຼົ່ານີ້: ມຸມມອງ ແລະ ອະຄະຕິຂອງເຈົ້າ! ອ່າໆ, ໃຫ້ຕື່ນຂຶ້ນ; ເວລາມັນສັ້ນ! ເງີຍຂຶ້ນ, ເງີຍຂຶ້ນ, ຈາກພາຍໃນຈິດວິນຍານ ແລະ ປ່ອຍໃຫ້ພຣະເຈົ້າຄວບຄຸມ. ບໍ່ວ່າຫຍັງຈະເກີດຂຶ້ນກໍຕາມ, ຢ່າກາຍເປັນເມຍຂອງໂລດອີກຄົນ. ມັນຊ່າງເປັນຕາສົມເພດຫຼາຍທີ່ຈະຖືກໂຍນຖິ້ມ! ຊ່າງເປັນຕາສົມເພດແທ້ໆ! ໂອ ຈົ່ງຕື່ນຂຶ້ນ!

# ບົດທີ 4

ພວກເຮົາຈະເຝົ້າເບິ່ງ ແລະ ລໍຄອຍເປັນໄລຍະໄລຍະ, ສະຫງົບໃນຈິດໃຈ ແລະ ສະແຫວງຫາດ້ວຍຫົວໃຈທີ່ບໍລິສຸດ. ບໍ່ວ່າຫຍັງຈະເກີດຂຶ້ນກັບພວກເຮົາກໍຕາມ, ພວກເຮົາຈະບໍ່ເຂົ້າຮ່ວມໃນການສົນທະນາຢ່າງຫູ້ບຫູຫູ້ບຕາ. ພວກເຮົາພຽງແຕ່ຕ້ອງສະຫງົບຢູ່ຕໍ່ໜ້າພຣະເຈົ້າ ແລະ ຮ່ວມໃນການສົນທະນາກັບພຣະອົງຢູ່ຢ່າງສະໝໍ່າສະເໝີ ແລະ ຫຼັງຈາກນັ້ນ ເຈດຕະນາຂອງພຣະອົງກໍຈະຖືກເປີດເຜີຍໃຫ້ແກ່ພວກເຮົາຢ່າງແນ່ນອນ. ພາຍໃນຈິດໃຈ, ພວກເຮົາຕ້ອງກຽມພ້ອມທີ່ຈະແຍກແຍະຢູ່ຕະຫຼອດເວລາ ແລະ ພວກເຮົາຕ້ອງມີຈິດໃຈທີ່ກະຕືລືລົ້ນ ແລະ ໝັ້ນຄົງ. ພວກເຮົາຕ້ອງຕັກຈາກນໍ້າແຫ່ງຊີວິດຕໍ່ໜ້າພຣະເຈົ້າ ເຊິ່ງເປັນນໍ້າທີ່ບຳລຸງລ້ຽງ ແລະ ເຕີມເຕັມຈິດໃຈທີ່ແຫ້ງແລ້ງຂອງພວກເຮົາ. ພວກເຮົາຕ້ອງກຽມພ້ອມຢູ່ຕະຫຼອດເວລາເພື່ອຊໍາລະລ້າງອຸປະນິໄສແບບຊາຕານຂອງພວກເຮົາອອກຈາກພວກເຮົາເອງ ເຊິ່ງນັ້ນກໍຄືການຖືວ່າຕົນເອງຊອບທຳ, ຄວາມອວດດີ, ຄວາມທະນົງຕົວ ແລະ ຄວາມພໍໃຈໃນຕົນເອງ. ພວກເຮົາຕ້ອງເປີດຫົວໃຈຂອງພວກເຮົາເພື່ອຮັບເອົາພຣະທຳຂອງພຣະເຈົ້າ ແລະ ເລີ່ມລົງມືປະຕິບັດໂດຍອີງຕາມພຣະທຳຂອງພຣະອົງ. ພວກເຮົາຕ້ອງຜະເຊີນ ແລະ ໝັ້ນໃຈໃນພຣະທຳຂອງພຣະອົງ ແລະ ບັນລຸຄວາມເຂົ້າໃຈກ່ຽວກັບພຣະທຳຂອງພຣະອົງ, ປ່ອຍໃຫ້ພຣະທຳຂອງພຣະອົງກາຍມາເປັນຊີວິດຂອງພວກເຮົາ. ນີ້ຄືໂອກາດທີ່ດີຂອງພວກເຮົາ! ມີແຕ່ເມື່ອພວກເຮົາດຳລົງຊີວິດຕາມພຣະທຳຂອງພຣະເຈົ້າເທົ່ານັ້ນ ພວກເຮົາຈຶ່ງຈະມີໄຊຊະນະ!

ບັດນີ້ ແນວຄິດຂອງພວກເຮົາເປັນຕາເບື່ອເກີນໄປ ແລະ ພວກເຮົາເວົ້າຢ່າງບໍ່ຈິງໃຈ ແລະ ປະພຶດຢ່າງບໍ່ຮອບຄອບ, ບໍ່ສາມາດທີ່ຈະປະຕິບັດຕາມພຣະວິນຍານ. ມື້ນີ້ບໍ່ຄືກັບທີ່ມັນເຄີຍເປັນໃນອະດີດ. ພາລະກິດຂອງພຣະວິນຍານບໍລິສຸດເຄື່ອນໄຫວໄປທາງໜ້າດ້ວຍຄວາມໄວຫຼາຍ. ພວກເຮົາຕ້ອງປະສົບກັບພຣະທຳຂອງພຣະເຈົ້າຢ່າງລະອຽດ; ທຸກແນວຄິດ ແລະ ທຸກຄວາມຄິດ, ທຸກການເຄື່ອນໄຫວ ແລະ ປະຕິກິລິຍາ, ພວກເຮົາຕ້ອງສາມາດທີ່ຈະແຍກແຍະໃນຫົວໃຈຂອງພວກເຮົາຢ່າງຊັດເຈນ. ບໍ່ມີສິ່ງໃດທີ່ພວກເຮົາເຮັດຕໍ່ໜ້າຜູ້ໃດຜູ້ໜຶ່ງ ຫຼື ລັບຫຼັງພວກເຂົາຈະສາມາດຫຼົບໜີການພິພາກສາຕໍ່ໜ້າບັນລັງຂອງພຣະຄຣິດໄດ້. ພຣະວິນຍານບໍລິສຸດກຳລັງນຳພາພວກເຮົາເຂົ້າສູ່ໂລກແຫ່ງປະສົບການທີ່ເລິກເຊິ່ງກວ່າເກົ່າ ເຊິ່ງເປັນບ່ອນທີ່ພວກເຮົາຈະມີຄວາມແນ່ໃຈຫຼາຍຂຶ້ນກ່ຽວກັບອົງຊົງລິດທານຸພາບສູງສຸດ.

ພຣະເຈົ້າແຫ່ງຈັກກະວານໄດ້ເປີດຕາຝ່າຍວິນຍານຂອງພວກເຮົາ ແລະ ຄວາມລຶກລັບໃນຈິດໃຈກໍຖືກເປີດເຜີຍແກ່ພວກເຮົາຢ່າງຕໍ່ເນື່ອງ. ໃຫ້ສະແຫວງຫາດ້ວຍຫົວໃຈທີ່ບໍລິສຸດ! ເຕັມໃຈທີ່ຈະຈ່າຍລາຄາ, ຂັບເຄື່ອນໄປຂ້າງໜ້າດ້ວຍຄວາມສາມັກຄີ, ພ້ອມທີ່ຈະປະຕິເສດຕົນເອງ, ບໍ່ໂລບມາກອີກຕໍ່ໄປ, ຕິດຕາມພຣະວິນຍານບໍລິສຸດ ແລະ ເພີດເພີນກັບພຣະທຳຂອງພຣະເຈົ້າ ແລະ ຫຼັງຈາກນັ້ນ ມະນຸດໃໝ່ແຫ່ງຈັກກະວານທັງປວງຈະປາກົດຂຶ້ນ. ຊ່ວງເວລານີ້ໃກ້ເຂົ້າມາແລ້ວ, ເວລາທີ່ຊາຕານຈະພົບກັບຈຸດຈົບຂອງມັນ, ຄວາມປະສົງຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດ, ຊົນຊາດທັງປວງໃນໂລກຈະກາຍມາເປັນອານາຈັກຂອງພຣະຄຣິດ ແລະ ພຣະຄຣິດຈະປົກຄອງດັ່ງກະສັດເທິງແຜ່ນດິນໂລກ ຕະຫຼອດໄປເປັນນິດ!

# ບົດທີ 5

ພູເຂົາ ແລະ ແມ່ນ້ຳປ່ຽນແປງ, ສາຍນ້ຳໄຫຼໄປຕາມເສັ້ນທາງຂອງພວກມັນ ແລະ ຊີວິດຂອງມະນຸດບໍ່ມີຄວາມທົນທານຄືກັບແຜ່ນດິນໂລກ ແລະ ທ້ອງຟ້າ. ມີພຽງແຕ່ພຣະເຈົ້າອົງຊົງລິດທານຸພາບສູງສຸດເທົ່ານັ້ນທີ່ເປັນຊີວິດທີ່ຟື້ນຄືນຊີບ ແລະ ຕະຫຼອດໄປເປັນນິດ ເຊິ່ງສືບຕໍ່ຕະຫຼອດໄປຈາກຮຸ່ນສູ່ຮຸ່ນ. ທຸກສິ່ງ ແລະ ທຸກເຫດການຢູ່ໃນມືຂອງພຣະອົງ ແລະ ຊາຕານຢູ່ກ້ອງຕີນຂອງພຣະອົງ.

ມື້ນີ້ ມັນແມ່ນການຄັດເລືອກທີ່ກຳນົດໄວ້ລ່ວງໜ້າຂອງພຣະເຈົ້າທີ່ພຣະອົງໄດ້ປົດປ່ອຍພວກເຮົາອອກຈາກກຳມືຂອງຊາຕານ. ພຣະອົງເປັນພຣະຜູ້ໄຖ່ຂອງພວກເຮົາຢ່າງແທ້ຈິງ. ແນ່ນອນ ຊີວິດທີ່ຟື້ນຄືນຊີບຊົ່ວນິດນິລັນຂອງພຣະຄຣິດໄດ້ເກີດຂຶ້ນຂ້າງໃນພວກເຮົາ, ດົນບັນດານໃຫ້ພວກເຮົາເຊື່ອມຕໍ່ກັບຊີວິດຂອງພຣະເຈົ້າ, ເພື່ອພວກເຮົາອາດຈະສາມາດມາຢູ່ຕໍ່ໜ້າພຣະອົງຢ່າງແນ່ນອນ, ກິນພຣະອົງ, ດື່ມພຣະອົງ ແລະ ຊື່ນຊົມພຣະອົງ. ນີ້ຄືການຖວາຍທີ່ບໍ່ເຫັນແກ່ຕົວທີ່ພຣະເຈົ້າໄດ້ມອບໃຫ້ໂດຍຈ່າຍລາຄາດ້ວຍເລືອດຈາກຫົວໃຈຂອງພຣະອົງ.

ລະດູການຜ່ານມາ ແລະ ຜ່ານໄປ, ຜ່ານລົມ ແລະ ນ້ຳກ້າມ, ປະສົບກັບຄວາມທົນທຸກ, ການຂົ່ມເຫັງ ແລະ ຄວາມລຳບາກຍາກແຄ້ນຢ່າງຫຼວງຫຼາຍໃນຊີວິດ, ການປະຕິເສດ ແລະ ການໃສ່ຮ້າຍຂອງໂລກຢ່າງໜັກ, ການກ່າວໂທດທີ່ຜິດໆຫຼາຍຢ່າງຈາກລັດຖະບານ ແລະ ເຖິງຢ່າງໃດກໍຕາມ ຄວາມເຊື່ອຂອງພຣະເຈົ້າ ຫຼື ຄວາມຕັ້ງໃຈຂອງພຣະອົງກໍບໍ່ຫຼຸດນ້ອຍຖອຍລົງແມ່ນແຕ່ໜ້ອຍເລີຍ. ອຸທິດຕົນໝົດຫົວໃຈຕໍ່ຄວາມປະສົງຂອງພຣະເຈົ້າ ແລະ ຕໍ່ການຄຸ້ມຄອງ ແລະ ແຜນການຂອງພຣະເຈົ້າ, ເພື່ອວ່າພວກມັນອາດຖືກເຮັດໃຫ້ສຳເລັດ, ພຣະອົງກຳນົດຊີວິດຂອງພຣະອົງເອງໄວ້ຕ່າງຫາກ. ສຳລັບຝູງຊົນຂອງປະຊາຊົນທັງປວງຂອງພຣະອົງ, ພຣະອົງບໍ່ລະເວັ້ນຄວາມເຈັບປວດ ໂດຍລ້ຽງ ແລະ ຫົດນ້ຳພວກເຂົາຢ່າງລະມັດລະວັງ. ບໍ່ວ່າພວກເຮົາປະສົບຄວາມມືດມົນແນວໃດກໍຕາມ ຫຼື ພວກເຮົາລຳບາກສໍ່າໃດກໍຕາມ, ພວກເຮົາຈຳເປັນຕ້ອງຍອມຢູ່ຕໍ່ໜ້າພຣະອົງເທົ່ານັ້ນ ແລະ ຊີວິດທີ່ຟື້ນຄືນຊີບຂອງພຣະຄຣິດຈະປ່ຽນແປງທຳມະຊາດເດີມຂອງພວກເຮົາ... ສຳລັບລູກຊາຍກົກທຸກຄົນເຫຼົ່ານີ້, ພຣະອົງເຮັດວຽກໜັກຢ່າງບໍ່ອິດເມື່ອຍ ໂດຍບໍ່ສົນອາຫານ ແລະ ການພັກຜ່ອນ. ແຕ່ລະມື້ ແລະ ແຕ່ລະຄືນ, ຜ່ານຄວາມຮ້ອນທີ່ເຜົາໄໝ້ ແລະ ຄວາມເຢັນທີ່ແຂງກະດ້າງ, ພຣະອົງເຝົ້າເບິ່ງໃນຊີໂອນຢ່າງໝົດໃຈ.

ໂລກ, ເຮືອນ, ວຽກງານ ແລະ ທຸກສິ່ງຖືກປະຖິ້ມທັງໝົດຢ່າງຍິນດີ, ຢ່າງເຕັມໃຈ ແລະ ຄວາມສຸກທາງໂລກກໍບໍ່ມີຫຍັງກ່ຽວຂ້ອງກັບພຣະອົງ... ພຣະທຳຈາກປາກຂອງພຣະອົງໂຈມຕີພວກເຮົາ, ເປີດໂປງສິ່ງຕ່າງໆທີ່ລີ້ລັບຢູ່ໃນຫົວໃຈຂອງພວກເຮົາ. ພວກເຮົາຈະບໍ່ສາມາດເຊື່ອໄດ້ແນວໃດ? ທຸກປະໂຫຍກທີ່ອອກມາຈາກປາກຂອງພຣະອົງອາດເກີດຂຶ້ນແທ້ໃນພວກເຮົາເວລາໃດກໍໄດ້. ບໍ່ວ່າພວກເຮົາເຮັດຫຍັງກໍຕາມ, ໃນການສະຖິດຂອງພວກເຮົາ ຫຼື ລີ້ລັບຈາກພຣະອົງ, ບໍ່ມີຫຍັງທີ່ພຣະອົງບໍ່ຮູ້, ບໍ່ມີຫຍັງທີ່ພຣະອົງບໍ່ເຂົ້າໃຈ, ທຸກສິ່ງຈະເປີດເຜີຍຕໍ່ໜ້າພຣະອົງຢ່າງແນ່ນອນ, ເຖິງແມ່ນຈະມີແຜນການ ແລະ ການຈັດແຈງຂອງພວກເຮົາເອງກໍຕາມ.

ນັ່ງຢູ່ຕໍ່ໜ້າພຣະອົງ, ຮູ້ສຶກເພີດເພີນພາຍໃນວິນຍານຂອງພວກເຮົາຢ່າງສະຫງົບ ແລະ ຢ່າງງຽບໆ, ແຕ່ຮູ້ສຶກເຖິງຄວາມວ່າງເປົ່າຢູ່ຂ້າງໃນສະເໝີ ແລະ ເປັນໜີ້ບຸນຄຸນພຣະເຈົ້າແທ້ໆ: ນີ້ຄືຄວາມອັດສະຈັນທີ່ບໍ່ສາມາດຈິນຕະນາການໄດ້ ແລະ ເປັນໄປບໍ່ໄດ້ທີ່ຈະບັນລຸ. ພຣະວິນຍານບໍລິສຸດກໍພຽງພໍທີ່ຈະພິສູດວ່າພຣະເຈົ້າອົງຊົງລິດທານຸພາບສູງສຸດແມ່ນພຣະເຈົ້າທີ່ແທ້ຈິງໜຶ່ງດຽວ! ມັນຄືຂໍ້ພິສູດທີ່ບໍ່ສາມາດໂຕ້ຖຽງໄດ້! ພວກເຮົາໃນກຸ່ມນີ້ໄດ້ຮັບພອນຢ່າງອະທິບາຍບໍ່ໄດ້! ຖ້າບໍ່ແມ່ນຍ້ອນຄວາມກະລຸນາ ແລະ ຄວາມເມດຕາຂອງພຣະເຈົ້າ, ພວກເຮົາຈະພຽງແຕ່ສາມາດໄປສູ່ການຕົກນະຣົກ ແລະ ຕິດຕາມຊາຕານ. ມີພຽງແຕ່ພຣະເຈົ້າອົງຊົງລິດທານຸພາບສູງສຸດເທົ່ານັ້ນຈຶ່ງສາມາດຊ່ວຍພວກເຮົາໃຫ້ລອດພົ້ນ!

ອາ! ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະເຈົ້າທີ່ແທ້ຈິງ! ແມ່ນພຣະເຈົ້າທີ່ໄດ້ເປີດຕາຝ່າຍວິນຍານຂອງພວກເຮົາ, ເຮັດໃຫ້ພວກເຮົາໄດ້ເບິ່ງເຫັນເຖິງຄວາມລຶກລັບຂອງໂລກຝ່າຍວິນຍານ. ໂອກາດຂອງອານາຈັກແມ່ນໄຮ້ຂອບເຂດ. ໃຫ້ພວກເຮົາເຝົ້າເບິ່ງໃນຂະນະທີ່ພວກເຮົາລໍຖ້າ. ມື້ນັ້ນບໍ່ໄດ້ຢູ່ຫ່າງໄກເກີນໄປ.

ແປວໄຟແຫ່ງສົງຄາມໝຸນວຽນ, ຄວັນຈາກປືນຄົກກຸ້ມໄປທົ່ວອາກາດ, ອາກາດເລີ່ມອຸ່ນ, ສະພາບອາກາດປ່ຽນແປງໄປ, ໂລກລະບາດຈະແຜ່ລາມ ແລະ ຜູ້ຄົນພຽງແຕ່ຈະຕາຍ ໂດຍບໍ່ມີຄວາມຫວັງທີ່ຈະຢູ່ລອດ.

ອາ! ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະເຈົ້າທີ່ແທ້ຈິງ! ພຣະອົງຄືປ້ອມປາການທີ່ແໜ້ນໜາຂອງພວກເຮົາ. ພຣະອົງຄືບ່ອນຫຼົບໄພຂອງພວກເຮົາ. ພວກເຮົາໂຮມຕົວກັນຢູ່ພາຍໃຕ້ປີກຂອງພຣະອົງ ແລະ ໄພພິບັດບໍ່ສາມາດມາເຖິງພວກເຮົາໄດ້. ສິ່ງດັ່ງກ່າວຄືການປົກປ້ອງ ແລະ ການດູແລອັນສັກສິດຂອງພຣະອົງ.

ພວກເຮົາທຸກຄົນເປັ່ງສຽງຂອງພວກເຮົາດ້ວຍສຽງເພງ, ພວກເຮົາຮ້ອງເພງສັນລະເສີນ ແລະ ສຽງແຫ່ງການສັນລະເສີນຂອງພວກເຮົາກໍດັງໄປທົ່ວຊີໂອນ! ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະເຈົ້າທີ່ແທ້ຈິງໄດ້ກະກຽມຈຸດໝາຍປາຍທາງທີ່ສະຫງ່າລາສີນັ້ນໃຫ້ແກ່ພວກເຮົາ. ໃຫ້ເຝົ້າລະວັງ, ໂອ ໃຫ້ເຝົ້າລະວັງ! ຈົນເຖິງຕອນນີ້ ຊົ່ວໂມງນັ້ນກໍບໍ່ໄດ້ຊ້າເກີນໄປ.

# ບົດທີ 6

ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ເຈົ້ານາຍຂອງສິ່ງທັງປວງ, ມີລິດອຳນາດແບບກະສັດຂອງພຣະອົງຈາກບັນລັງຂອງພຣະອົງ. ພຣະອົງປົກຄອງເໜືອຈັກກະວານ ແລະ ສິ່ງທັງປວງ ແລະ ພຣະອົງປະຕິບັດໜ້າທີ່ໃນການນຳພາພວກເຮົາເທິງໂລກທັງປວງ. ໃນທຸກຊ່ວງເວລາ ພວກເຮົາຈະໃກ້ຊິດກັບພຣະອົງ ແລະ ມາຢູ່ຕໍ່ໜ້າພຣະອົງຢ່າງງຽບໆ ບໍ່ເຄີຍພາດແມ່ນແຕ່ຊ່ວງເວລາດຽວ ແລະ ມີບົດຮຽນໃຫ້ພວກເຮົາໄດ້ຮຽນຮູ້ຢູ່ສະເໝີ. ທຸກສິ່ງ ນັບຕັ້ງແຕ່ສະພາບແວດລ້ອມອ້ອມຂ້າງຈົນເຖິງຜູ້ຄົນ, ເລື່ອງລາວ ແລະ ສິ່ງຕ່າງໆ ລ້ວນແລ້ວແຕ່ເປັນຢູ່ໂດຍການອະນຸຍາດຈາກບັນລັງຂອງພຣະອົງ. ຢ່າປ່ອຍໃຫ້ຄວາມບໍ່ພໍໃຈເກີດຂຶ້ນໃນຫົວໃຈຂອງເຈົ້າ ບໍ່ວ່າໃນກໍລະນີໃດກໍຕາມ ຫຼື ພຣະເຈົ້າຈະບໍ່ປະທານຄວາມກະລຸນາຂອງພຣະອົງໃຫ້ແກ່ເຈົ້າ. ເມື່ອຄວາມເຈັບປ່ວຍເກີດຂຶ້ນ, ນີ້ແມ່ນຄວາມຮັກຂອງພຣະເຈົ້າ ແລະ ແນ່ນອນເຈດຕະນາດີຂອງພຣະອົງມີຢູ່ພາຍໃນ. ເຖິງແມ່ນຮ່າງກາຍຂອງເຈົ້າອາດຜະເຊີນກັບການທົນທຸກເລັກນ້ອຍ, ບໍ່ໃຫ້ພິຈາລະນາແນວຄິດໃດໆຈາກຊາຕານ. ໃຫ້ສັນລະເສີນພຣະເຈົ້າໃນທ່າມກາງຄວາມເຈັບປ່ວຍ ແລະ ມີຄວາມສຸກກັບພຣະເຈົ້າໃນທ່າມກາງການສັນລະເສີນຂອງເຈົ້າ. ຢ່າເສຍໃຈເມື່ອຢູ່ຕໍ່ໜ້າຄວາມເຈັບປ່ວຍ, ໃຫ້ສືບຕໍ່ສະແຫວງຫາອີກຄັ້ງ ແລະ ຢ່າທໍ້ຖອຍ ແລະ ພຣະເຈົ້າຈະສ່ອງສະແຫວງເຈົ້າດ້ວຍແສງສະຫວ່າງຂອງພຣະອົງ. ຄວາມເຊື່ອຂອງໂຢບເປັນແນວໃດ? ພຣະເຈົ້າອົງຊົງລິດທານຸພາບສູງສຸດເປັນທ່ານໝໍທີ່ມີອຳນາດທັງປວງ! ການອາໄສໃນຄວາມເຈັບປ່ວຍກໍຄືການເຈັບປ່ວຍ, ແຕ່ການອາໄສໃນວິນຍານຄືການສະບາຍດີ. ສະນັ້ນ ຕາບໃດທີ່ເຈົ້າຍັງມີໜຶ່ງລົມຫາຍໃຈ, ພຣະເຈົ້າຈະບໍ່ປ່ອຍໃຫ້ເຈົ້າຕາຍ.

ພວກເຮົາມີຊີວິດຂອງພຣະຄຣິດທີ່ຟື້ນຄືນຊີບຢູ່ພາຍໃນພວກເຮົາ. ພວກເຮົາຂາດຄວາມເຊື່ອໃນການສະຖິດຂອງພຣະເຈົ້າຢ່າງປະຕິເສດບໍ່ໄດ້: ຂໍໃຫ້ພຣະເຈົ້າໃສ່ຄວາມເຊື່ອທີ່ແທ້ຈິງພາຍໃນພວກເຮົາ. ແນ່ນອນ ພຣະທຳຂອງພຣະເຈົ້າຫວານຊື່ນ! ພຣະທຳຂອງພຣະເຈົ້າຄືຢາທີ່ແຮງ! ມັນເຮັດໃຫ້ມານຮ້າຍ ແລະ ຊາຕານອັບອາຍ! ການເຂົ້າໃຈພຣະທຳຂອງພຣະເຈົ້າມອບການສະໜັບສະໜູນໃຫ້ແກ່ພວກເຮົາ. ພຣະທຳຂອງພຣະອົງເຮັດວຽກຢ່າງໄວເພື່ອຊ່ວຍຫົວໃຈຂອງພວກເຮົາໃຫ້ລອດພົ້ນ! ມັນປັດເປົ່າທຸກສິ່ງ ແລະ ເຮັດໃຫ້ທຸກຢ່າງຢູ່ໃນຄວາມສະຫງົບ. ຄວາມເຊື່ອເປັນຄືກັບຂົວໄມ້ໜຶ່ງດຽວ: ຄົນທີ່ຍຶດຕິດກັບຊີວິດຢ່າງໜ້າສັງສານກໍຈະມີຄວາມລຳບາກທີ່ຈະຂ້າມມັນໄດ້, ແຕ່ຄົນທີ່ພ້ອມຈະເສຍສະຫຼະຕົນເອງກໍສາມາດຂ້າມຜ່ານໄດ້ ໂດຍບໍ່ຕົກລົງ ແລະ ປາສະຈາກຄວາມກັງວົນ. ຖ້າມະນຸດມີຄວາມຄິດທີ່ບໍ່ກ້າ ແລະ ຢ້ານກົວ, ມັນກໍເປັນຍ້ອນຊາຕານໄດ້ຫຼອກລວງພວກເຂົາ, ຢ້ານວ່າພວກເຮົາຈະຂ້າມຂົວແຫ່ງຄວາມເຊື່ອເພື່ອເຂົ້າໄປຫາພຣະເຈົ້າ. ຊາຕານກຳລັງພະຍາຍາມໃນທຸກວິທີທີ່ເປັນໄປໄດ້ເພື່ອສົ່ງຄວາມຄິດຂອງມັນແກ່ພວກເຮົາ. ໃນທຸກຊ່ວງເວລາ ພວກເຮົາຄວນອະທິຖານໃຫ້ພຣະເຈົ້າສ່ອງແສງໃຫ້ແກ່ພວກເຮົາດ້ວຍແສງສະຫວ່າງຂອງພຣະອົງ, ໃນທຸກຊ່ວງເວລາ ພວກເຮົາຄວນເພິ່ງພາພຣະເຈົ້າເພື່ອຊຳລະລ້າງພິດຂອງຊາຕານອອກຈາກພວກເຮົາ, ປະຕິບັດວິທີການຫຍັບເຂົ້າໃກ້ພຣະເຈົ້າໃນຫົວໃຈຂອງພວກເຮົາໃນທຸກຊ່ວງເວລາ ແລະ ປ່ອຍໃຫ້ພຣະເຈົ້າມີອຳນາດເໜືອການເປັນຢູ່ທັງໝົດຂອງພວກເຮົາ.

# ບົດທີ 7

ການເກີດຂຶ້ນຂອງສະພາບແວດລ້ອມທີ່ຢູ່ອ້ອມຂ້າງພວກເຮົາເລັ່ງໃຫ້ພວກເຮົາຖອນກັບຄືນສູ່ວິນຍານ. ຢ່າປະພຶດດ້ວຍຫົວໃຈທີ່ແຂງກະດ້າງ ໂດຍບໍ່ສົນໃຈວ່າພຣະວິນຍານບໍລິສຸດກັງວົນ ຫຼື ບໍ່ ແລະ ຢ່າພະຍາຍາມເຮັດວ່າໂຕສະຫຼາດ. ຢ່າອີ່ມອົກອີ່ມໃຈ ແລະ ພໍໃຈໃນຕົນເອງ ຫຼື ໃຫ້ຄວາມສຳຄັນຫຼາຍເກີນໄປກັບຄວາມລຳບາກຂອງເຈົ້າເອງ. ສິ່ງດຽວທີ່ຕ້ອງເຮັດກໍຄືການນະມັດສະການພຣະເຈົ້າດ້ວຍວິນຍານ ແລະ ດ້ວຍຄວາມຈິງ. ເຈົ້າບໍ່ສາມາດປະພຣະທຳຂອງພຣະເຈົ້າໄວ້ເບື້ອງຫຼັງ ຫຼື ເຮັດຫູທວນລົມໃສ່ພຣະທຳເຫຼົ່ານັ້ນ; ເຈົ້າຕ້ອງພິຈາລະນາພວກມັນຢ່າງຮອບຄອບ, ເຮັດຊ້ຳການອະທິຖານ-ການອ່ານຂອງເຈົ້າ ແລະ ເຂົ້າໃຈເຖິງຊີວິດທີ່ຢູ່ພາຍໃນພຣະທຳ. ຢ່າມີສ່ວນຮ່ວມໃນສິ່ງທີ່ໄຮ້ປະໂຫຍດໂດຍກືນກິນພວກມັນຢ່າງໂລພາ ໂດຍບໍ່ໃຫ້ເວລາຕົນເອງໄດ້ຍ່ອຍພວກມັນ. ເຈົ້າອີງໃສ່ພຣະທຳຂອງພຣະເຈົ້າໃນທຸກສິ່ງທີ່ເຈົ້າເຮັດບໍ? ຢ່າເວົ້າຢ່າງໂອ້ອວດຄືກັບເດັກນ້ອຍ ແລະ ຫຼັງຈາກນັ້ນກໍສັບສົນໝົດເມື່ອໃດກໍຕາມທີ່ບັນຫາເກີດຂຶ້ນ. ເຈົ້າຕ້ອງຝຶກວິນຍານຂອງເຈົ້າທຸກຊົ່ວໂມງໃນທຸກມື້; ຢ່າຫຼຸດຄວາມເຂັ້ມງວດລົງແມ່ນແຕ່ຊ່ວງເວລາດຽວ. ເຈົ້າຕ້ອງມີວິນຍານທີ່ກະຕືລືລົ້ນ. ບໍ່ວ່າເຈົ້າອາດພະເຊີນກັບຜູ້ໃດ, ເຫດການໃດ ຫຼື ສິ່ງໃດກໍຕາມ, ຖ້າເຈົ້າມາຢູ່ຕໍ່ໜ້າພຣະເຈົ້າ, ເຈົ້າຈະມີເສັ້ນທາງໃຫ້ຕິດຕາມ. ເຈົ້າຕ້ອງກິນ ແລະ ດື່ມພຣະທຳຂອງພຣະເຈົ້າທຸກມື້, ຊອກຫາຄວາມໝາຍຂອງພຣະທຳເຫຼົ່ານີ້ ໂດຍບໍ່ປ່ອຍປະລະເລີຍ, ໃຫ້ພະຍາຍາມຫຼາຍຂຶ້ນ, ເຮັດໃຫ້ສິ່ງຕ່າງໆຖືກຕ້ອງຈົນເຖິງລາຍລະອຽດສຸດທ້າຍ ແລະ ເຮັດໃຫ້ຕົນເອງພຽບພ້ອມດ້ວຍຄວາມຈິງຢ່າງຄົບຖ້ວນ ເພື່ອຫຼີກລ່ຽງການເຂົ້າໃຈຄວາມປະສົງຂອງພຣະເຈົ້າຢ່າງຜິດໆ. ເຈົ້າຕ້ອງຂະຫຍາຍຂອບເຂດປະສົບການຂອງເຈົ້າ ແລະ ແນໃສ່ການພະເຊີນກັບພຣະທຳຂອງພຣະເຈົ້າ. ຜ່ານທາງປະສົບການ, ເຈົ້າຈະສາມາດແນ່ໃຈຫຼາຍຂຶ້ນກ່ຽວກັບພຣະເຈົ້າ; ຫາກປາສະຈາກປະສົບການ, ການອ້າງວ່າໝັ້ນໃຈໃນພຣະອົງກໍເປັນພຽງຊຸດຄຳເວົ້າທີ່ວ່າງເປົ່າເທົ່ານັ້ນ. ພວກເຮົາຕ້ອງຊັດເຈນ! ຈົ່ງຕື່ນຂຶ້ນ! ຢ່າຂີ້ຄ້ານອີກຕໍ່ໄປ; ຖ້າເຈົ້າຈັດການກັບສິ່ງຕ່າງໆໃນລັກສະນະຕາມບຸນຕາມກຳໂດຍບໍ່ພະຍາຍາມທີ່ຈະກ້າວໜ້າ, ແລ້ວເຈົ້າກໍຕາບອດຫຼາຍແທ້ໆ. ເຈົ້າຕ້ອງໃສ່ໃຈໃນພາລະກິດຂອງພຣະວິນຍານບໍລິສຸດ, ຟັງສຽງຂອງພຣະວິນຍານບໍລິສຸດຢ່າງລະມັດລະວັງ, ເປີດຫູຂອງເຈົ້າໃຫ້ແກ່ພຣະທຳຂອງພຣະເຈົ້າ, ຖະໜອມເວລາທີ່ເຈົ້າມີເຫຼືອຢູ່ ແລະ ໃຫ້ຊຳລະລາຄາ ບໍ່ວ່າມັນຈະມີສ່ຳໃດກໍຕາມ. ເມື່ອເຈົ້າມີເຫຼັກ, ໃຫ້ໃຊ້ມັນໃນບ່ອນທີ່ມັນເກີດຜົນ, ເພື່ອສ້າງດາບທີ່ເຂັ້ມແຂງ; ຍຶດຕິດສິ່ງທີ່ສຳຄັນເປັນຢ່າງດີ ແລະ ສຸມໃສ່ການນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ. ຖ້າເຈົ້າຈາກພຣະທຳຂອງພຣະເຈົ້າ, ແລ້ວບໍ່ວ່າຢູ່ພາຍນອກ ເຈົ້າອາດເຮັດດີປານໃດກໍຕາມ, ມັນກໍຈະບໍ່ເກີດປະໂຫຍດຫຍັງ. ການປະຕິບັດໂດຍການເວົ້າແຕ່ປາກເທົ່ານັ້ນແມ່ນບໍ່ເປັນທີ່ຍອມຮັບສຳລັບພຣະເຈົ້າ; ການປ່ຽນແປງຕ້ອງເກີດຂຶ້ນຜ່ານທາງພຶດຕິກຳ, ອຸປະນິໄສ, ຄວາມເຊື່ອ, ຄວາມກ້າຫານ ແລະ ຄວາມເຂົ້າໃຈຂອງເຈົ້າ.

ເວລາໃກ້ມາເຖິງແລ້ວ! ແມ່ນແຕ່ສິ່ງທີ່ດີທີ່ສຸດໃນໂລກນີ້ກໍຕ້ອງຖືກໂຍນຖິ້ມ. ບໍ່ມີຄວາມຫຍຸ້ງຍາກ ຫຼື ອັນຕະລາຍຈຳນວນໃດກໍຕາມທີ່ສາມາດເຮັດໃຫ້ພວກເຮົາຢ້ານ ຫຼື ພວກເຮົາບໍ່ສາມາດໜັກໃຈໄດ້,

ເຖິງແມ່ນທ້ອງຟ້າຕ້ອງພັງທະລາຍ. ຫາກປາສະຈາກຄວາມຕັ້ງໃຈແບບນີ້, ມັນກໍຈະຍາກເກີນໄປສຳລັບເຈົ້າທີ່ຈະກາຍມາເປັນຜູ້ໃດຜູ້ໜຶ່ງທີ່ມີຄວາມສຳຄັນ. ຄົນທີ່ຂີ້ຢ້ານ ແລະ ຜູ້ຄົນທີ່ຍຶດຕິດກັບຊີວິດຢ່າງຂີ້ຢ້ານກໍບໍ່ສົມຄວນຢືນຢູ່ຕໍ່ໜ້າພຣະເຈົ້າ.

ພຣະເຈົ້າອົງຊົງລິດທານຸພາບສູງສຸດແມ່ນພຣະເຈົ້າທີ່ແທ້ຈິງ. ບໍ່ວ່າພວກເຮົາອາດບໍ່ຮູ້ຫຼາຍສໍ່າໃດກໍຕາມ, ພຣະອົງກໍຍັງຈະສົງສານພວກເຮົາ, ມືຂອງພຣະອົງຈະຊ່ວຍພວກເຮົາໃຫ້ລອດພົ້ນຢ່າງແນ່ນອນ ແລະ ພຣະອົງຍັງຈະເຮັດໃຫ້ພວກເຮົາສົມບູນ. ຕາບໃດທີ່ພວກເຮົາມີຫົວໃຈທີ່ຕ້ອງການພຣະເຈົ້າຢ່າງແທ້ຈິງ, ຕາບໃດທີ່ພວກເຮົາຕິດຕາມຢ່າງໃກ້ຊິດ ແລະ ບໍ່ທໍ້ໃຈ ແລະ ຕາບໃດທີ່ພວກເຮົາສະແຫວງຫາດ້ວຍຄວາມຮູ້ສຶກຮີບຮ້ອນ, ພຣະອົງກໍຈະບໍ່ປະຕິບັດຕໍ່ຜູ້ໃດຜູ້ໜຶ່ງໃນພວກເຮົາຢ່າງບໍ່ຍຸຕິທຳແທ້ໆ; ພຣະອົງຈະເຕີມເຕັມສິ່ງທີ່ພວກເຮົາຂາດຢ່າງແນ່ນອນ ແລະ ພຣະອົງຈະເຮັດໃຫ້ພວກເຮົາພໍໃຈ. ທັງໝົດນີ້ແມ່ນຄວາມເມດຕາຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ.

ຖ້າຜູ້ໃດຜູ້ໜຶ່ງໂລພາ ແລະ ຂີ້ຄ້ານ, ມີຊີວິດທີ່ເຮັດໃຫ້ທ້ອງຂອງພວກເຂົາອີ່ມຢູ່ສະເໝີ ແລະ ເສີຍເມີຍຕໍ່ທຸກສິ່ງ, ພວກເຂົາກໍຈະຄົ້ນພົບວ່າມັນຍາກທີ່ຈະຫຼີກລ່ຽງການປະສົບກັບຄວາມສູນເສຍ. ພຣະເຈົ້າອົງຊົງລິດທານຸພາບສູງສຸດປົກຄອງທຸກສິ່ງ ແລະ ທຸກເຫດການທີ່ເກີດຂຶ້ນ! ຕາບໃດທີ່ພວກເຮົາເງີຍຂຶ້ນເບິ່ງພຣະອົງໃນຫົວໃຈຂອງພວກເຮົາຢູ່ຕະຫຼອດເວລາ ແລະ ເຂົ້າສູ່ວິນຍານ ແລະ ສົນທະນາກັບພຣະອົງ, ພຣະອົງຈະສະແດງໃຫ້ພວກເຮົາເຫັນທຸກສິ່ງທີ່ພວກເຮົາສະແຫວງຫາ ແລະ ຄວາມປະສົງຂອງພຣະອົງຈະຖືກເປີດເຜີຍໃຫ້ແກ່ພວກເຮົາຢ່າງແນ່ນອນ. ແລ້ວຫົວໃຈຂອງພວກເຮົາຈະມີຄວາມປິຕິຍິນດີ ແລະ ຄວາມສະຫງົບສຸກ, ໝັ້ນຄົງດ້ວຍຄວາມກະຈ່າງແຈ້ງທີ່ສົມບູນ. ມັນສຳຄັນທີ່ຈະສາມາດປະຕິບັດຕາມພຣະທຳຂອງພຣະອົງ. ການທີ່ສາມາດເຂົ້າໃຈຄວາມປະສົງຂອງພຣະອົງ ແລະ ດຳລົງຊີວິດໂດຍເພິ່ງພາພຣະທຳຂອງພຣະອົງເທົ່ານັ້ນຈຶ່ງນັບວ່າເປັນປະສົບການທີ່ແທ້ຈິງ.

ຖ້າພວກເຮົາເຂົ້າໃຈພຣະທຳຂອງພຣະເຈົ້າເທົ່ານັ້ນ ຄວາມຈິງແຫ່ງພຣະທຳຂອງພຣະເຈົ້າຈຶ່ງຈະສາມາດເຂົ້າສູ່ພວກເຮົາ ແລະ ກາຍມາເປັນຊີວິດຂອງພວກເຮົາໄດ້. ຫາກປາສະຈາກປະສົບການຕົວຈິງ, ເຈົ້າຈະສາມາດເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າໄດ້ແນວໃດ? ຖ້າເຈົ້າບໍ່ສາມາດຮັບພຣະທຳຂອງພຣະເຈົ້າໃຫ້ເປັນຊີວິດຂອງເຈົ້າ, ແລ້ວອຸປະນິໄສຂອງເຈົ້າກໍຈະບໍ່ສາມາດປ່ຽນແປງໄດ້.

ພາລະກິດຂອງພຣະວິນຍານບໍລິສຸດກ້າວໜ້າຢ່າງກ້າວກະໂດດ. ຖ້າເຈົ້າບໍ່ຕິດຕາມຢ່າງໃກ້ຊິດ ແລະ ຮັບການຝຶກອົບຮົມ, ມັນກໍຈະຍາກສຳລັບເຈົ້າທີ່ຈະທັນກັບບາດກ້າວຂອງພຣະວິນຍານບໍລິສຸດໃນຂະນະທີ່ພຣະອົງກ້າວໄປຂ້າງໜ້າຢ່າງໄວວາ. ໃຫ້ຟ້າວ ແລະ ກໍ່ໃຫ້ເກີດການປ່ຽນແປງຢ່າງຄົບຖ້ວນ, ເພື່ອບໍ່ໃຫ້ເຈົ້າຖືກຢຽບຢໍ່າຢູ່ກ້ອງຕີນຂອງຊາຕານ ແລະ ເຂົ້າສູ່ທະເລສາບແຫ່ງໄຟ ແລະ ມາດ ເຊິ່ງບໍ່ມີບ່ອນໃຫ້ຫຼົບໜີ. ຈົ່ງໄປໃນຕອນນີ້ ແລະ ສະແຫວງສໍ່າທີ່ເຈົ້າສາມາດເຮັດໄດ້ ເພື່ອວ່າເຈົ້າຈະບໍ່ໄດ້ຖືກໂຍນຖິ້ມ.

# ບົດທີ 8

ນັບຕັ້ງແຕ່ເວລາທີ່ພຣະເຈົ້າອົງຊົງລິດທານຸພາບສູງສຸດ ກໍຄືກະສັດຂອງລາຊະອານາຈັກ ໄດ້ຮັບການເປັນພະຍານ, ຂອບເຂດຂອງການຄຸ້ມຄອງຂອງພຣະເຈົ້າໄດ້ຖືກເປີດເຜີຍ ໄປຢ່າງຄົບຖ້ວນທົ່ວທັງຈັກກະວານທັງປວງ ການປາກົດຕົວຂອງພຣະເຈົ້າບໍ່ພຽງແຕ່ໄດ້ຮັບການເປັນພະຍານຢູ່ປະເທດຈີນເທົ່ານັ້ນ ແຕ່ຊື່ຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດໄດ້ຮັບການເປັນພະຍານໃນທຸກປະເທດ ແລະທຸກແຫ່ງຫົນ. ພວກເຂົາທຸກຄົນ ກຳລັງຮ້ອງເອີ້ນຊື່ອັນບໍລິສຸດ, ສະແຫວງຫາທີ່ຈະສົນທະນາກັບພຣະເຈົ້າດ້ວຍທຸກວິທີທາງທີ່ເປັນໄປໄດ້, ເຂົ້າໃຈຄວາມປະສົງຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ ແລະ ຮັບໃຊ້ພຣະອົງດ້ວຍການຮ່ວມມືໃນຄຣິສຕະຈັກ. ນີ້ແມ່ນວິທີທີ່ໜ້າອັດສະຈັນໃຈທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ.

ພາສາຂອງປະເທດຕ່າງໆນັ້ນແຕກຕ່າງກັນ ແຕ່ມີພຽງພຣະວິນຍານໜຶ່ງດຽວເທົ່ານັ້ນ. ພຣະວິນຍານອົງນີ້ຮວມຄຣິສຕະຈັກຕ່າງໆທົ່ວຈັກກະວານເຂົ້າກັນ ແລະ ເປັນໜຶ່ງດຽວກັບພຣະເຈົ້າແທ້ໆ ໂດຍບໍ່ມີຄວາມແຕກຕ່າງກັນແມ່ນແຕ່ໜ້ອຍເລີຍ. ນີ້ແມ່ນສິ່ງທີ່ບໍ່ຕ້ອງສົງໄສເລີຍ. ຕອນນີ້ ພຣະວິນຍານບໍລິສຸດເອີ້ນຫາພວກເຂົາ ແລະ ສຽງຂອງພຣະອົງປຸກພວກເຂົາໃຫ້ຕື່ນ. ນີ້ແມ່ນສຽງແຫ່ງຄວາມເມດຕາຂອງພຣະເຈົ້າ. ພວກເຂົາທຸກຄົນກຳລັງຮ້ອງຫານາມອັນບໍລິສຸດຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພວກເຂົາຍັງໃຫ້ການສັນລະເສີນ ແລະ ພວກເຂົາຮ້ອງເພງ. ບໍ່ເຄີຍມີການບ່ຽງເບນໃດໆໃນພາລະກິດຂອງພຣະວິນຍານບໍລິສຸດ; ຄົນເຫຼົ່ານີ້ໄປໄກເພື່ອກ້າວໄປສູ່ເສັ້ນທາງທີ່ຖືກຕ້ອງ, ພວກເຂົາບໍ່ຍອມຖອຍຫຼັງ ເພາະສິ່ງມະຫັດສະຈັນກອງຢູ່ເທິງສິ່ງມະຫັດສະຈັນ. ນີ້ແມ່ນບາງສິ່ງທີ່ຜູ້ຄົນເຫັນວ່າຍາກທີ່ຈະຈິນຕະນາການໄດ້ ແລະ ເປັນໄປບໍ່ໄດ້ທີ່ຈະຄາດເດົາອອກ.

ພຣະເຈົ້າອົງຊົງລິດທານຸພາບສູງສຸດແມ່ນກະສັດຂອງຊີວິດໃນຈັກກະວານ! ພຣະອົງປະທັບນັ່ງຢູ່ເທິງບັນລັງອັນມີສະຫງ່າລາສີ ແລະ ພິພາກສາໂລກ, ຄອບຄອງທຸກສິ່ງ ແລະ ປົກຄອງທຸກຊາດ; ທຸກຄົນຄຸເຂົ່າລົງຕໍ່ພຣະອົງ, ອະທິຖານຫາພຣະອົງ, ເຂົ້າໃກ້ພຣະອົງ ແລະ ສື່ສານກັບພຣະອົງ. ບໍ່ວ່າເຈົ້າໄດ້ເຊື່ອໃນພຣະເຈົ້າມາດົນປານໃດກໍຕາມ, ບໍ່ວ່າສະຖານະຂອງເຈົ້າຈະສູງພຽງໃດ ຫຼື ບໍ່ວ່າຄວາມອາວຸໂສຂອງເຈົ້າຈະມີຫຼາຍພຽງໃດກໍຕາມ, ຖ້າເຈົ້າຕໍ່ຕ້ານພຣະເຈົ້າໃນໃຈຂອງເຈົ້າ ເຈົ້າກໍຈະຕ້ອງຖືກພິພາກສາ ແລະຕ້ອງກົ້ມຂາບລົງຕໍ່ໜ້າພຣະອົງ, ເປັ່ງສຽງຂອງການອ້ອນວອນທີ່ເຈັບປວດອອກມາ; ທີ່ຈິງແລ້ວ ນີ້ແມ່ນການເກັບກ່ຽວໝາກຜົນແຫ່ງການກະທຳຂອງຕົວເຈົ້າເອງ. ສຽງຄຳຄວນນີ້ແມ່ນສຽງຂອງການຖືກທໍລະມານໃນທະເລສາບແຫ່ງໄຟ ແລະ ມາດ, ມັນເປັນສຽງຮ້ອງຂອງການຖືກຂ້ຽນຕີໂດຍໄມ້ຄ້ອນເຫຼັກຂອງພຣະເຈົ້າ; ນີ້ແມ່ນການພິພາກສາຕໍ່ໜ້າບ່ອນນັ່ງຂອງພຣະຄຣິດ.

ບາງຄົນຢ້ານກົວ, ບາງຄົນສຳນຶກຜິດຖືກດີຊົ່ວ, ບາງຄົນຕື່ນຕົວ, ບາງຄົນເອົາໃຈໃສ່ຟັງຢ່າງຕັ້ງໃຈ, ບາງຄົນກັບໃຈ ແລະ ເລີ່ມຕົ້ນໃໝ່, ຮູ້ສຶກສຳນຶກຜິດຢ່າງທີ່ສຸດ, ບາງຄົນຮ້ອງໄຫ້ດ້ວຍຄວາມເຈັບປວດຢ່າງຂົມຂື່ນ, ບາງຄົນປະຖິ້ມທຸກສິ່ງ ແລະ ຄົ້ນຫາຢ່າງສິ້ນຫວັງ, ບາງຄົນກວດສອບຕົນເອງ ແລະ

ບໍ່ກ້າເຮັດຫຍັງຢ່າງປ່າເຖື່ອນອີກຕໍ່ໄປ, ບາງຄົນສະແຫວງຫາຢ່າງຮີບດ່ວນທີ່ຈະເຂົ້າໃກ້ພຣະເຈົ້າ, ບາງຄົນກວດສອບຄວາມສຳນຶກຂອງຕົນເອງ, ຖາມວ່າເປັນຫຍັງຊີວິດຂອງພວກເຂົາຈຶ່ງບໍ່ສາມາດກ້າວໜ້າ. ບາງຄົນຍັງສັບສົນຢູ່, ບາງຄົນບໍ່ປົດໂສ້ຕົນຂອງພວກເຂົາ ແລະ ກ້າວໄປຂ້າງໜ້າຢ່າງກ້າຫານ, ເຂົ້າໃຈຫຼັກສຳຄັນ ແລະ ບໍ່ສູນເສຍເວລາໃນການເຂົ້າຮ່ວມຊີວິດຂອງພວກເຂົາ. ບາງຄົນຍັງລັງເລໃຈ ແລະ ບໍ່ຊັດເຈນຕໍ່ນິມິດ, ພາລະທີ່ພວກເຂົາແບກ ແລະ ອູ້ມໄວ້ໃນໃຈຂອງພວກເຂົານັ້ນໜັກຫຼາຍແທ້ໆ.

ຖ້າຈິດໃຈຂອງເຈົ້າບໍ່ຊັດເຈນ, ແລ້ວພຣະວິນຍານບໍລິສຸດກໍບໍ່ມີທາງທີ່ຈະປະຕິບັດພາລະກິດໃນຕົວເຈົ້າໄດ້. ທັງໝົດທີ່ເຈົ້າສຸມໃສ່, ເສັ້ນທາງທີ່ເຈົ້າຍ່າງ ແລະ ທຸກສິ່ງທີ່ຫົວໃຈຂອງເຈົ້າປາຖະໜານັ້ນແມ່ນເຕັມໄປດ້ວຍແນວຄິດຂອງເຈົ້າ ແລະ ການເຫັນວ່າຕົນເອງຊອບທຳ! ເຮົາເຜົາໄໝ້ດ້ວຍຄວາມໃຈຮ້ອນແລ້ວ, ເຮົາຫວັງວ່າເຮົາຈະສາມາດເຮັດໃຫ້ພວກເຈົ້າທຸກຄົນສົມບູນໄດ້ທັນທີ ເພື່ອວ່າເຈົ້າອາດຈະຖືກເຮັດໃຫ້ເໝາະສົມທີ່ຈະຖືກເຮົາໃຊ້ໃນໄວໆນີ້ ແລະ ເພື່ອວ່າພາລະອັນໜັກໜ່ວງຂອງເຮົາຈະສາມາດຖືກແບ່ງເບົາໄດ້. ແຕ່ເມື່ອເຫັນພວກເຈົ້າເປັນແບບນີ້, ເຮົາເຫັນວ່າມັນເປັນໄປບໍ່ໄດ້ທີ່ຈະສະແຫວງຫາຜົນຮັບໂດຍໄວ. ເຮົາເຮັດໄດ້ພຽງແຕ່ລໍຖ້າຢ່າງອົດທົນ, ຍ່າງຊ້າໆ ແລະ ສະໜັບສະໜູນ ແລະ ນຳພາພວກເຈົ້າຢ່າງຊ້າໆ. ໂອ, ພວກເຈົ້າຄວນລ້າງຫົວຂອງພວກເຈົ້າເສຍ! ແມ່ນຫຍັງຄວນຖືກປະຖິ້ມ, ແມ່ນຫຍັງຄືສົມບັດຂອງເຈົ້າ, ແມ່ນຫຍັງຄືຈຸດອ່ອນທີ່ເຖິງຕາຍຂອງເຈົ້າ, ແມ່ນຫຍັງຄືອຸປະສັກຂອງເຈົ້າ? ໄຕ່ຕອງຄຳຖາມເຫຼົ່ານີ້ໃຫ້ຫຼາຍຂຶ້ນໃນວິນຍານຂອງເຈົ້າ ແລະ ສົນທະນາກັບເຮົາ. ສິ່ງທີ່ເຮົາຕ້ອງການແມ່ນໃຫ້ຫົວໃຈຂອງພວກເຈົ້າແນມຂຶ້ນມາຫາເຮົາຢ່າງສະຫງົບງຽບ; ເຮົາບໍ່ຕ້ອງການການຮັບໃຊ້ດ້ວຍປາກຂອງພວກເຈົ້າ. ສຳລັບບັນດາພວກເຈົ້າເຫຼົ່ານັ້ນທີ່ສະແຫວງຫາເຮົາຢ່າງແທ້ຈິງ, ເຮົາຈະເປີດເຜີຍທຸກສິ່ງໃຫ້ແກ່ເຈົ້າ. ບາດຍ່າງຂອງເຮົາໄວຂຶ້ນ; ຕາບໃດທີ່ຫົວໃຈຂອງເຈົ້າແນມເບິ່ງເຮົາ ແລະ ຕາບໃດທີ່ເຈົ້າຕິດຕາມເຮົາຕະຫຼອດເວລາ, ຄວາມປະສົງຂອງເຮົາກໍຈະສາມາດຖືກມອບໃຫ້ເຈົ້າໂດຍການດົນໃຈ ແລະ ຖືກເປີດເຜີຍໃຫ້ແກ່ເຈົ້າໄດ້ໃນທຸກເວລາ. ບັນດາຜູ້ທີ່ເອົາໃຈໃສ່ໃນການລໍຖ້າຈະໄດ້ຮັບການບຳລຸງລ້ຽງ ແລະ ຈະມີຫົນທາງຢູ່ຂ້າງໜ້າ. ຄົນທີ່ບໍ່ເອົາໃຈໃສ່ຈະພົບວ່າມັນຍາກທີ່ຈະເຂົ້າໃຈຫົວໃຈຂອງເຮົາ ແລະ ພວກເຂົາຈະຍ່າງໄປສູ່ທາງຕັນ.

ເຮົາປາຖະໜາໃຫ້ພວກເຈົ້າທຸກຄົນລຸກຂຶ້ນໂດຍໄວ ແລະ ຮ່ວມມືກັບເຮົາ ແລະ ຢູ່ໃກ້ເຮົາຕະຫຼອດເວລາ ບໍ່ແມ່ນພຽງແຕ່ມື້ດຽວ ແລະ ຄືນດຽວ. ມືຂອງເຮົາຕ້ອງດຶງພວກເຈົ້າໄວ້ ແລະ ກະຕຸ້ນພວກເຈົ້າຢູ່ສະເໝີ, ຜັກດັນພວກເຈົ້າ, ຊັກຈູງພວກເຈົ້າໃຫ້ສືບຕໍ່ ແລະ ຂໍຮ້ອງຕໍ່ພວກເຈົ້າໃຫ້ກ້າວໄປຂ້າງໜ້າ! ພວກເຈົ້າພຽງແຕ່ບໍ່ເຂົ້າໃຈຄວາມປະສົງຂອງເຮົາ. ສິ່ງກີດຂວາງຂອງແນວຄວາມຄິດຂອງຕົວພວກເຈົ້າເອງ ແລະ ສິ່ງກີດຂວາງຂອງຄວາມຫຍຸ້ງຍາກຂອງໂລກນັ້ນຮຸນແຮງເກີນໄປ ແລະ ພວກເຈົ້າບໍ່ສາມາດມີຄວາມສະໜິດສະໜົມກັບເຮົາຫຼາຍຂຶ້ນ. ເວົ້າຕາມກົງ, ພວກເຈົ້າມາຫາເຮົາເມື່ອພວກເຈົ້າມີບັນຫາ, ແຕ່ເມື່ອພວກເຈົ້າບໍ່ມີບັນຫາ ຫົວໃຈຂອງພວກເຈົ້າກໍມີບັນຫາ. ຫົວໃຈຂອງພວກເຈົ້າກາຍເປັນຄືກັບຕະຫຼາດເສລີ ແລະ ເຕັມໄປດ້ວຍອຸປະນິໄສຂອງຊາຕານ; ພວກມັນຫຍຸ້ງຢູ່ກັບສິ່ງຂອງໃນໂລກ ແລະ ພວກເຈົ້າກໍບໍ່ຮູ້ວິທີສົນທະນາກັບເຮົາ. ເຮົາຈະບໍ່ຮູ້ສຶກກັງວົນໃຈກັບພວກເຈົ້າໄດ້ແນວໃດ?

ແຕ່ມັນຈະບໍ່ເຮັດໃຫ້ກັງວົນໃຈ. ເວລາກົດດັນເກີນໄປ ແລະ ໜ້າວຽກກໍເຄັ່ງຄັດເກີນໄປ. ບາດກ້າວຂອງເຮົາບິນໄປຂ້າງໜ້າ; ພວກເຈົ້າຕ້ອງຍຶດໝັ້ນໃນທຸກສິ່ງທີ່ພວກເຈົ້າມີ, ແນມເບິ່ງເຮົາຢູ່ທຸກຊ່ວງເວລາ ແລະ ສົນທະນາກັບເຮົາຢ່າງໃກ້ຊິດ. ແລ້ວຄວາມປະສົງຂອງເຮົາຈະຖືກເປີດເຜີຍໃຫ້ແກ່ເຈົ້າທຸກຊ່ວງເວລາຢ່າງແນ່ນອນ. ເມື່ອພວກເຈົ້າເຂົ້າໃຈຫົວໃຈຂອງເຮົາ, ເມື່ອນັ້ນພວກເຈົ້າຈຶ່ງມີຫົນທາງກ້າວຕໍ່ໄປ. ພວກເຈົ້າຕ້ອງບໍ່ລັງເລໃຈອີກຕໍ່ໄປ. ຈົ່ງຍຶດຖືການສົນທະນາທີ່ແທ້ຈິງກັບເຮົາ ແລະ ຢ່າພະຍາຍາມຫຼອກລວງ ຫຼື ພະຍາຍາມສະຫຼາດເກີນໄປ; ນັ້ນຈະເປັນພຽງແຕ່ການຫຼອກລວງຕົວພວກເຈົ້າເອງເທົ່ານັ້ນ ແລະ ຈະຖືກເປີດເຜີຍໄດ້ທຸກຊ່ວງເວລາຕໍ່ໜ້າບ່ອນນັ່ງຂອງພຣະຄຣິດດ້ວຍ. ຄຳແທ້ຈະບໍ່ຢ້ານການຖືກທົດລອງດ້ວຍໄຟ, ນີ້ແມ່ນຄວາມຈິງ! ຢ່າລັງເລໃຈ ແລະ ຢ່າທໍ້ໃຈ ຫຼື ອ່ອນແອ. ຈົ່ງສົນທະນາໂດຍກົງກັບເຮົາດ້ວຍວິນຍານຂອງເຈົ້າໃຫ້ຫຼາຍຂຶ້ນ, ລໍຖ້າຢ່າງອົດທົນ ແລະ ເຮົາຈະເປີດເຜີຍໃຫ້ແກ່ເຈົ້າໃນເວລາຂອງເຮົາເອງຢ່າງແນ່ນອນ. ເຈົ້າຕ້ອງເອົາໃຈໃສ່ ແລະ ບໍ່ປ່ອຍໃຫ້ຄວາມພະຍາຍາມຂອງເຮົາຕ້ອງສູນເປົ່າກັບເຈົ້າເດັດຂາດ; ຢ່າໃຫ້ເສຍໄປແມ່ນແຕ່ຄາວດຽວ. ເມື່ອຫົວໃຈຂອງເຈົ້າຢູ່ໃນການສົນທະນາກັບເຮົາຢ່າງຕໍ່ເນື່ອງ, ເມື່ອຫົວໃຈຂອງເຈົ້າມີຊີວິດຢູ່ຕໍ່ໜ້າເຮົາຢູ່ສະເໝີ ແລ້ວຈະບໍ່ມີໃຜ, ບໍ່ມີເຫດການໃດ, ບໍ່ມີສິ່ງໃດ, ບໍ່ມີຜົວ, ບໍ່ມີລູກຊາຍ ຫຼື ລູກສາວທີ່ສາມາດລົບກວນການສົນທະນາຂອງເຈົ້າກັບເຮົາທີ່ຢູ່ໃນຫົວໃຈຂອງເຈົ້າໄດ້. ເມື່ອຫົວໃຈຂອງເຈົ້າຖືກພຣະວິນຍານບໍລິສຸດຈຳກັດຢູ່ສະເໝີ ແລະ ເມື່ອເຈົ້າກຳລັງສົນທະນາກັບເຮົາຢູ່ທຸກຊ່ວງເວລາ, ຄວາມປະສົງຂອງເຮົາກໍຈະຖືກເປີດເຜີຍໃຫ້ແກ່ເຈົ້າຢ່າງແນ່ນອນ. ເມື່ອເຈົ້າຍັບເຂົ້າມາໃກ້ເຮົາເລື້ອຍໆດ້ວຍວິທີນີ້, ບໍ່ວ່າສະພາບແວດລ້ອມອ້ອມຂ້າງຂອງເຈົ້າຈະເປັນແນວໃດ ຫຼື ເຈົ້າຈະພະເຊີນກັບບຸກຄົນໃດ, ເຫດການໃດ ຫຼື ສິ່ງໃດກໍຕາມ, ເຈົ້າຈະບໍ່ສັບສົນ ແຕ່ຈະມີຫົນທາງກ້າວຕໍ່ໄປ.

ປົກກະຕິແລ້ວ, ຖ້າເຈົ້າບໍ່ປ່ອຍໃຫ້ສິ່ງໃດໆເລື່ອນໃນເລື່ອງໃຫຍ່ ຫຼື ນ້ອຍ, ຖ້າທຸກໆຄວາມຄິດ ແລະ ແນວຄິດຂອງເຈົ້າໄດ້ຖືກເຮັດໃຫ້ບໍລິສຸດ ແລະ ຖ້າເຈົ້າສະຫງົບຢູ່ໃນວິນຍານຂອງເຈົ້າ, ແລ້ວເມື່ອໃດກໍຕາມທີ່ເຈົ້າພະເຊີນກັບບັນຫາບາງຢ່າງ, ພຣະທຳຂອງເຮົາກໍຈະຖືກດົນໃຈທັນທີໃນຕົວເຈົ້າ ຄືກັບກັບແວ່ນແຍງທີ່ແຈ້ງສະຫວ່າງສຳລັບໃຫ້ເຈົ້າກວດເບິ່ງຕົວເຈົ້າເອງ ແລະ ຈາກນັ້ນເຈົ້າຈະມີຫົນທາງກ້າວຕໍ່ໄປ. ສິ່ງນີ້ເອີ້ນວ່າການໃຊ້ຢາຮັກສາທີ່ເໝາະສົມກັບຄວາມເຈັບປ່ວຍ! ແລ້ວອາການຈະໄດ້ຮັບການປິ່ນປົວຢ່າງແນ່ນອນ ເຊິ່ງນັ້ນແມ່ນອຳນາດອັນໄພສານຂອງພຣະເຈົ້າ. ເຮົາຈະສ່ອງສະຫວ່າງ ແລະ ເຍືອງທາງໃຫ້ແກ່ທຸກຄົນທີ່ຫິວ ແລະ ກະຫາຍຄວາມຊອບທຳ ແລະ ຜູ້ທີ່ຄົ້ນຫາດ້ວຍຄວາມຈິງໃຈຢ່າງແນ່ນອນ. ເຮົາຈະສະແດງໃຫ້ພວກເຈົ້າທຸກຄົນເຫັນຄວາມລຶກລັບຂອງໂລກຝ່າຍວິນຍານ ແລະ ເສັ້ນທາງໃນຕໍ່ໜ້າ, ເຮັດໃຫ້ເຈົ້າປະຖິ້ມອຸປະນິໄສອັນເສື່ອມຊາມເດີມໆຂອງເຈົ້າໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອວ່າເຈົ້າອາດຈະບັນລຸຊີວິດທີ່ເຕີບໃຫຍ່ ແລະ ເໝາະສົມທີ່ຈະຖືກເຮົາໃຊ້ ແລະ ເພື່ອວ່າພາລະກິດແຫ່ງຂ່າວປະເສີດຈະດຳເນີນໄປໂດຍບໍ່ມີສິ່ງກີດຂວາງໃນໄວໆນີ້. ມີແຕ່ເມື່ອນັ້ນ ຄວາມປະສົງຂອງເຮົາຈຶ່ງຈະເປັນທີ່ພໍໃຈ, ມີແຕ່ເມື່ອນັ້ນແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າຈຶ່ງຈະສຳເລັດລົງໃນເວລາທີ່ສັ້ນທີ່ສຸດ. ພຣະເຈົ້າຈະໄດ້ຮັບອານາຈັກ ແລະ ຈະລົງມາສູ່ແຜ່ນດິນໂລກ ແລະ ພວກເຮົາຈະເຂົ້າສູ່ຄວາມສະຫງ່າລາສີພ້ອມກັນ!

# ບົດທີ 9

ເຮົາຕ້ອງການເຕືອນເຈົ້າວ່າ ການສົງໄສ ຫຼື ການປະໝາດແມ່ນແຕ່ໜ້ອຍດຽວກ່ຽວກັບພຣະທຳຂອງເຮົາແມ່ນບໍ່ສາມາດຮັບໄດ້. ເຈົ້າຕ້ອງໃສ່ໃຈ ແລະ ເຊື່ອຟັງ ແລະ ປະຕິບັດຕາມເຈດຕະນາຂອງເຮົາ. ເຈົ້າຕ້ອງຕື່ນຕົວຢູ່ສະເໝີ ແລະ ຢ່າສະແດງນິໄສອວດດີ ແລະ ຄິດວ່າຕົນເອງຊອບທຳຈັກເທື່ອ: ເຈົ້າຕ້ອງເພິ່ງພາເຮົາເພື່ອກຳຈັດອຸປະນິໄສເກົ່າ, ອຸປະນິໄສໂດຍທຳມະຊາດທີ່ຕິດຝັງຢູ່ພາຍໃນຕົວເຈົ້ານັ້ນອອກໄປ. ເຈົ້າຄວນມີຄວາມສາມາດຮັກສາສະພາບປົກກະຕິຕໍ່ໜ້າເຮົາ ແລະ ມີອຸປະນິໄສທີ່ໝັ້ນຄົງ. ຄວາມຄິດຂອງເຈົ້າຕ້ອງມີສະຕິ ແລະ ຊັດເຈນ ແລະ ບໍ່ຄວນໄກວ ຫຼື ຖືກຄວບຄຸມໂດຍຄົນໃດຄົນໜຶ່ງ, ເຫດການໃດໜຶ່ງ ຫຼື ສິ່ງໃດໜຶ່ງ. ເຈົ້າຄວນສາມາດມີຄວາມສະຫງົບຢູ່ຕໍ່ໜ້າເຮົາສະເໝີ ແລະ ຮັກສາຄວາມໃກ້ຊິດ ແລະ ການສົນທະນາກັບເຮົາຢ່າງຕໍ່ເນື່ອງ. ເຈົ້າຕ້ອງສະແດງກຳລັງ ແລະ ກະດູກສັນຫຼັງຂອງເຈົ້າ ແລະ ຍຶດໝັ້ນໃນຄຳພະຍານຂອງເຈົ້າທີ່ມີຕໍ່ເຮົາ; ຈົ່ງລຸກຂຶ້ນ ແລະ ເວົ້າເພື່ອເຮົາ ແລະ ຢ່າຢ້ານສິ່ງທີ່ຄົນອື່ນຈະເວົ້າ. ຈົ່ງຕັ້ງໃຈປະຕິບັດຕາມເຈດຕະນາຂອງເຮົາ ແລະ ຢ່າປ່ອຍໃຫ້ຄົນອື່ນຄວບຄຸມເຈົ້າ. ສິ່ງທີ່ເຮົາເປີດເຜີຍໃຫ້ກັບເຈົ້າຕ້ອງຖືກປະຕິບັດຕາມເຈດຕະນາຂອງເຮົາ ແລະ ບໍ່ສາມາດຊັກຊ້າໄດ້. ໃນສ່ວນເລິກຂອງເຈົ້າ ເຈົ້າຮູ້ສຶກແນວໃດ? ເຈົ້າອຶດອັດ ແມ່ນບໍ່? ເຈົ້າຈະເຂົ້າໃຈ. ເປັນຫຍັງເຈົ້າຈຶ່ງບໍ່ສາມາດຢືນຂຶ້ນ ແລະ ເວົ້າເພື່ອເຮົາ ໃນຂະນະທີ່ຄຳນຶງເຖິງພາລະຂອງເຮົາ? ເຈົ້າສືບຕໍ່ມີສ່ວນຮ່ວມໃນການວາງແຜນທີ່ບໍ່ສຳຄັນ, ແຕ່ເຮົາເຫັນທຸກສິ່ງຢ່າງຊັດເຈນໝົດແລ້ວ. ເຮົາແມ່ນຜູ້ສະໜັບສະໜູນຂອງເຈົ້າ ແລະ ສິ່ງກຳບັງຂອງເຈົ້າ. ທຸກສິ່ງຢູ່ໃນມືຂອງເຮົາ, ແລ້ວເຈົ້າຢ້ານຫຍັງ? ເຈົ້າບໍ່ແມ່ນຄົນທີ່ອ່ອນໄຫວເກີນໄປບໍ? ເຈົ້າຕ້ອງປະຖິ້ມອາລົມຂອງເຈົ້າໂດຍໄວເທົ່າທີ່ຈະໄວໄດ້; ເຮົາບໍ່ສະແດງອອກດ້ວຍການໃຊ້ອາລົມ ແຕ່ ກົງກັນຂ້າມເຮົາໃຊ້ຄວາມຊອບທຳ. ຖ້າພໍ່ແມ່ຂອງເຈົ້າເຮັດໃນສິ່ງທີ່ບໍ່ມີປະໂຫຍດຫຍັງຕໍ່ຄຣິສຕະຈັກ, ແລ້ວພວກເຂົາກໍຈະບໍ່ສາມາດລອດພົ້ນໄດ້! ເຈດຕະນາຂອງເຮົາໄດ້ຖືກເປີດເຜີຍໃຫ້ກັບເຈົ້າ ແລະ ເຈົ້າຕ້ອງບໍ່ປະຕິເສດສິ່ງເຫຼົ່ານັ້ນ. ກົງກັນຂ້າມ ເຈົ້າຕ້ອງໃສ່ໃຈຂອງເຈົ້າທັງໝົດກັບສິ່ງເຫຼົ່ານັ້ນ ແລະ ປະຖິ້ມທຸກສິ່ງເພື່ອຕິດຕາມຢ່າງໝົດຫົວໃຈ. ເຮົາຈະຮັກສາເຈົ້າໄວ້ໃນມືຂອງເຮົາຢູ່ສະເໝີ. ຢ່າຂີ້ຢ້ານ ແລະ ປ່ອຍໃຫ້ຖືກຄວບຄຸມໂດຍສາມີ ຫຼື ພັນລະຍາຂອງເຈົ້າ; ເຈົ້າຕ້ອງປ່ອຍໃຫ້ຄວາມປະສົງຂອງເຮົາໄດ້ຮັບການປະຕິບັດ.

ຈົ່ງມີຄວາມເຊື່ອ! ຈົ່ງມີຄວາມເຊື່ອ! ເຮົາຄືອົງຊົງລິດທານຸພາບສູງສຸດຂອງເຈົ້າ. ບາງເທື່ອ ເຈົ້າມີຄວາມເຂົ້າໃຈບາງຢ່າງໃນສິ່ງນີ້, ແຕ່ເຈົ້າຍັງຕ້ອງໄດ້ລະມັດລະວັງ. ເພື່ອເຫັນແກ່ຄຣິສຕະຈັກ, ຄວາມປະສົງຂອງເຮົາ ແລະ ການຄຸ້ມຄອງຂອງເຮົາ, ເຈົ້າຕ້ອງອຸທິດທັງໝົດ ແລະ ເຈົ້າຈະຖືກເຮັດໃຫ້ເຫັນຄວາມລຶກລັບ ແລະ ຜົນໄດ້ຮັບທັງໝົດຢ່າງຊັດເຈນ. ຈະບໍ່ມີການຊັກຊ້າອີກຕໍ່ໄປ; ມື້ເຫຼົ່ານັ້ນກຳລັງມາເຖິງຈຸດສິ້ນສຸດ. ແລ້ວເຈົ້າຄວນເຮັດແນວໃດ? ເຈົ້າຄວນສະແຫວງຫາເພື່ອເຕີບໂຕ ແລະ ເປັນຜູ້ໃຫຍ່ໃນຊີວິດຂອງເຈົ້າໄດ້ແນວໃດ? ເຈົ້າຈະສາມາດເຮັດໃຫ້ຕົນເອງເປັນປະໂຫຍດຕໍ່ເຮົາຢ່າງໄວໄດ້ແນວໃດ? ເຈົ້າຈະເຮັດໃຫ້ຄວາມປະສົງຂອງເຮົາຖືກປະຕິບັດໄດ້ແນວໃດ? ຄຳຖາມເຫຼົ່ານີ້ແມ່ນຈຳເປັນ

ຕ້ອງມີການໄຕ່ຕອງຢ່າງລະອຽດ ແລະ ສິນທະນາກັບເຮົາຢ່າງເລິກເຊິ່ງຫຼາຍຂຶ້ນ. ຈົ່ງເພິ່ງພາເຮົາ, ຈົ່ງເຊື່ອໃນເຮົາ, ຢ່າປະໝາດ ແລະ ຈົ່ງມີຄວາມສາມາດທີ່ຈະເລີ່ມເຮັດສິ່ງຕ່າງໆຕາມການນຳພາຂອງເຮົາ. ເຈົ້າຕ້ອງປະກອບມີຄວາມຈິງຢ່າງດີ ແລະ ເຈົ້າຕ້ອງກິນ ແລະ ດື່ມຄວາມຈິງນັ້ນໃຫ້ເລື້ອຍຫຼາຍຍິ່ງຂຶ້ນ. ທຸກຄວາມຈິງຕ້ອງຖືກປະຕິບັດກ່ອນທີ່ຈະສາມາດເຂົ້າໃຈມັນໄດ້ຢ່າງຊັດເຈນ.

ບັດນີ້ ເຈົ້າຮູ້ສຶກແລ້ວບໍວ່າ ເຈົ້າບໍ່ມີເວລາພຽງພໍ? ເຈົ້າຍັງຮູ້ສຶກຢູ່ໃນຂ້າງໃນບໍວ່າ ເຈົ້າແຕກຕ່າງຈາກເມື່ອກ່ອນ ແລະ ພາລະຂອງເຈົ້າໃນຕອນນີ້ເບິ່ງຄືກັບວ່າໜັກຫຼາຍ? ເຈດຕະນາຂອງເຮົາແມ່ນກ່ຽວກັບເຈົ້າ; ເຈົ້າຕ້ອງບໍ່ສັບສົນ, ຢ່າແຍກຈາກສິ່ງເຫຼົ່ານັ້ນ ແລະ ຕ້ອງພົວພັນກັບເຮົາຢູ່ສະເໝີ. ຈົ່ງຢູ່ໃກ້ຊິດເຮົາຕະລອດ, ສື່ສານກັບເຮົາ, ຄຳນຶງເຖິງຫົວໃຈຂອງເຮົາ ແລະ ສາມາດຮັບໃຊ້ຢ່າງພ້ອມພຽງກັບຄົນອື່ນ ເພື່ອວ່າ ເຈດຕະນາຂອງເຮົາຈະຖືກເປີດເຜີຍຕໍ່ພວກເຈົ້າສະເໝີ. ຈົ່ງໃສ່ໃຈຢ່າງໃກ້ຊິດຕະຫຼອດເວລາ! ຈົ່ງໃສ່ໃຈຢ່າງໃກ້ຊິດ! ຢ່າຂີ້ຄ້ານແມ່ນແຕ່ໜ້ອຍດຽວ; ນັ້ນແມ່ນໜ້າທີ່ຂອງເຈົ້າ ແລະ ພາລະກິດຂອງເຮົາກໍອາໄສຢູ່ໃນນັ້ນ.

ໃນຕອນນີ້ ເຈົ້າອາດມີຄວາມເຂົ້າໃຈເລັກນ້ອຍ ແລະ ຮູ້ສຶກວ່າສິ່ງນີ້ຂ້ອນຂ້າງມະຫັດສະຈັນ. ເຈົ້າອາດມີຂໍ້ສົງໄສໃນອະດີດ ແລະ ຮູ້ສຶກວ່າ ມັນແຕກຕ່າງຈາກມະຕິ, ທັດສະນະ ແລະ ຄວາມຄິດຂອງມະນຸດຢ່າງສິ້ນເຊີງ, ແຕ່ບັດນີ້ ເຈົ້າເຂົ້າໃຈມັນຢ່າງແທ້ຈິງແລ້ວ. ນີ້ແມ່ນພາລະກິດທີ່ມະຫັດສະຈັນຂອງເຮົາ ແລະ ມັນເປັນພາລະກິດທີ່ມະຫັດສະຈັນຂອງພຣະເຈົ້າເຊັ່ນກັນ. ເຈົ້າຕ້ອງຕື່ນຕົວຢ່າງແທ້ຈິງ ແລະ ລໍຖ້າໃນເວລາທີ່ເຈົ້າຍ່າງໃນພາລະກິດນັ້ນ. ເວລາຢູ່ໃນກຳມືຂອງເຮົາ; ຢ່າເຮັດໃຫ້ມັນສູນເປົ່າ ແລະ ຢ່າຊັກຊ້າແມ່ນແຕ່ຊ່ວງເວລາດຽວ. ການຊັກຊ້າເສຍເວລາຈະຖ່ວງດຶງພາລະກິດຂອງເຮົາ ແລະ ມັນເຮັດໃຫ້ຄວາມປະສົງຂອງເຮົາຖືກຂັດຂວາງໃນເຈົ້າ. ເຈົ້າຕ້ອງໄຕ່ຕອງ ແລະ ສົນທະນາກັບເຮົາເລື້ອຍໆ. ເຈົ້າຕ້ອງນຳການກະທຳທຸກຢ່າງ, ການເຄື່ອນໄຫວ, ຄວາມຄິດ, ແນວຄິດ, ຄອບຄົວ, ສາມີ, ລູກຊາຍ ແລະ ລູກສາວຂອງເຈົ້າມາຢູ່ຕໍ່ໜ້າເຮົາເຊັ່ນກັນ. ຢ່າເພິ່ງພາຕົນເອງໃນການປະຕິບັດຂອງເຈົ້າ, ຖ້າບໍ່ດັ່ງນັ້ນ ເຮົາຈະໃຈຮ້າຍຫຼາຍ ແລະ ເມື່ອນັ້ນ ການສູນເສຍຂອງເຈົ້າກໍຈະແພງທີ່ສຸດ.

ຈົ່ງຢັບຢັ້ງບາດກ້າວຂອງເຈົ້າເອງຢູ່ສະເໝີ ແລະ ຍ່າງພາຍໃນພຣະທຳຂອງເຮົາຕະຫຼອດເວລາ. ເຈົ້າຕ້ອງມີສະຕິປັນຍາຂອງເຮົາ. ຖ້າເຈົ້າພົບກັບຄວາມຫຍຸ້ງຍາກໃດກໍຕາມ ກໍໃຫ້ມາຢູ່ຕໍ່ໜ້າເຮົາ ແລ້ວເຮົາຈະໃຫ້ຄຳຊີ້ນຳກັບເຈົ້າ. ຢ່າສ້າງບັນຫາ ຫຼື ສະແດງຄວາມວຸ້ນວາຍ. ຖ້າຊີວິດຂອງເຈົ້າບໍ່ໄດ້ຮັບປະໂຫຍດຫຍັງ ມັນກໍເປັນຍ້ອນເຈົ້າຂາດຄວາມຮູ້ ແລະ ບໍ່ສາມາດແຍກແຍະລະຫວ່າງຄຳເວົ້າດີ ແລະ ຊົ່ວ. ເຈົ້າຈະບໍ່ເຂົ້າໃຈສິ່ງນີ້ຈົນກວ່າເຈົ້າຖືກທຳຮ້າຍ, ຢູ່ໃນສະພາບບໍ່ດີ ແລະ ປາສະຈາກການສະຖິດຂອງພຣະວິນຍານບໍລິສຸດ ແຕ່ເມື່ອຮອດຕອນນັ້ນມາ ມັນກໍຈະຊ້າເກີນໄປແລ້ວ. ເວລາກຳລັງເລັ່ງໃນຕອນນີ້, ສະນັ້ນ ເຈົ້າຕ້ອງບໍ່ຊັກຊ້າແມ່ນແຕ່ໜ້ອຍດຽວໃນການແຂ່ງຂັນຊີວິດຂອງເຈົ້າ; ເຈົ້າຕ້ອງຕິດຕາມບາດກ້າວຂອງເຮົາຢ່າງໃກ້ຊິດ. ເມື່ອຄວາມຫຍຸ້ງຍາກໃດກໍຕາມເກີດຂຶ້ນ, ໃຫ້ປະຕິບັດວິປັດສະໜາເລື້ອຍໆໂດຍມາຢູ່ໃກ້ຊິດກັບເຮົາ ແລະ ສົນທະນາກັບເຮົາໂດຍກົງ. ຖ້າເຈົ້າສາມາດເຂົ້າໃຈເສັ້ນທາງນີ້, ສິ່ງນີ້ກໍຈະເຮັດໃຫ້ທາງເຂົ້າງ່າຍຂຶ້ນສຳລັບເຈົ້າ.

ພຣະທຳຂອງເຮົາບໍ່ໄດ້ພຽງແຕ່ແນໃສ່ສະເພາະເຈົ້າ; ທຸກຄົນໃນຄຣິສຕະຈັກກຳລັງຂາດເຂີນໃນຫຼາຍດ້ານທີ່ແຕກຕ່າງກັນ. ພວກເຈົ້າຕ້ອງສົນທະນາຫຼາຍຂຶ້ນ, ສາມາດກິນ ແລະ ດື່ມຢ່າງເປັນອິດສະຫຼະໃນລະຫວ່າງການອຸທິດຝ່າຍວິນຍານຂອງພວກເຈົ້າເອງ, ສາມາດເຂົ້າໃຈຄວາມຈິງທີ່ສຳຄັນ ແລະ ນຳພວກມັນໄປປະຕິບັດທັນທີ. ເຈົ້າຕ້ອງມີຄວາມຮູ້ສຶກເຖິງຄວາມເປັນຈິງໃນພຣະທຳຂອງເຮົາ: ຈົ່ງເຂົ້າໃຈແກ່ນແທ້ຂອງມັນ ແລະ ຫຼັກການຂອງມັນ ແລະ ຢ່າໄດ້ລະເມີຂອງເຈົ້າ. ຈົ່ງຕຶກຕອງ ແລະ ສົນທະນາກັບເຮົາຢູ່ສະເໝີ ແລ້ວສິ່ງຕ່າງໆກໍຈະຖືກເປີດເຜີຍເທື່ອລະໜ້ອຍ. ເຈົ້າບໍ່ສາມາດຫຍັບເຂົ້າໃກ້ພຣະເຈົ້າພຽງຊ່ວງເວລາໃດໜຶ່ງ ແລະ ຫຼັງຈາກນັ້ນ ເຈົ້າກໍປັ່ນປ່ວນເມື່ອມີສິ່ງເກີດຂຶ້ນກັບເຈົ້າ ໂດຍບໍ່ລໍຖ້າໃຫ້ຫົວໃຈຂອງເຈົ້າມີຄວາມສະຫງົບຕໍ່ໜ້າພຣະເຈົ້າ. ເຈົ້າສັບສົນຢູ່ສະເໝີ ແລະ ບໍ່ຊັດເຈນກ່ຽວກັບສິ່ງຕ່າງໆ ແລະ ບໍ່ສາມາດເຫັນໃບໜ້າຂອງເຮົາ; ສະນັ້ນ ເຈົ້າຈຶ່ງບໍ່ສາມາດເຂົ້າໃຈເຖິງຫົວໃຈຂອງເຮົາຢ່າງຊັດເຈນ ແລະ ເຖິງແມ່ນວ່າ ເຈົ້າຈະສາມາດເຂົ້າໃຈມັນໄດ້ເລັກນ້ອຍ ເຈົ້າກໍຍັງບໍ່ແນ່ໃຈ ແລະ ຍັງສົງໄສຢູ່. ມີພຽງແຕ່ເມື່ອເຮົາໄດ້ຄອບຄອງຫົວໃຈຂອງເຈົ້າຢ່າງສົມບູນ ແລະ ຈິດໃຈຂອງເຈົ້າບໍ່ຖືກສິ່ງຕ່າງໆໃນໂລກລົບກວນ ແລະ ເຈົ້າສາມາດລໍຖ້າດ້ວຍຈິດໃຈທີ່ສົດໃສ ແລະ ສະຫງົບ, ເຮົາກໍຈະເປີດເຜີຍຕໍ່ພວກເຈົ້າເທື່ອລະຄົນຕາມເຈດຕະນາຂອງເຮົາ. ພວກເຈົ້າຄວນເຂົ້າໃຈເສັ້ນທາງນີ້ໃນການຫຍັບເຂົ້າໃກ້ເຮົາ. ໃຜກໍຕາມທີ່ໂຈມຕີ ຫຼື ສາບແຊ່ງເຈົ້າ ຫຼື ບໍ່ວ່າຜູ້ຄົນຈະມອບສິ່ງດີສໍ່າໃດໃຫ້ກັບເຈົ້າກໍຕາມ, ມັນກໍບໍ່ສາມາດຍອມຮັບໄດ້ຖ້າພວກເຂົາບໍ່ຍອມໃຫ້ເຈົ້າເຂົ້າໃກ້ຊິດກັບພຣະເຈົ້າ. ໃຫ້ຫົວໃຈຂອງເຈົ້າຢູ່ໃນກຳມືຂອງເຮົາ ແລະ ບໍ່ອອກຈາກຂ້າງເຮົາຈັກເທື່ອ. ຍ້ອນຄວາມໃກ້ຊິດ ແລະ ການສົນທະນາແບບນີ້, ພໍ່ແມ່, ສາມີ, ລູກໆ, ຄວາມສຳພັນອື່ນໆໃນຄອບຄົວ ແລະ ຄວາມຜູກພັນອື່ນໆກັບທາງໂລກລ້ວນແລ້ວແຕ່ຈະເລື່ອນຫາຍໄປ. ເຈົ້າຈະໄດ້ຮັບຄວາມຫວານຊື່ນທີ່ບໍ່ສາມາດບັນລະຍາຍ ໄດ້ໃນຫົວໃຈຂອງເຈົ້າ ແລະ ເຈົ້າຈະຜະເຊີນກັບລົດຊາດທີ່ຫອມຫວານ ແລະ ແຊບຫຼາຍ; ຍິ່ງໄປກວ່ານັ້ນ ເຈົ້າຈະບໍ່ສາມາດແຍກອອກຈາກເຮົາໄດ້ຢ່າງແທ້ຈິງ. ຖ້າພວກເຈົ້າສືບຕໍ່ໃນລັກສະນະນີ້, ພວກເຈົ້າຈະເຂົ້າໃຈສິ່ງທີ່ຢູ່ໃນຫົວໃຈຂອງເຮົາ. ເຈົ້າຈະບໍ່ສູນເສຍຫົນທາງຂອງເຈົ້າເມື່ອເຈົ້າກ້າວໄປຂ້າງໜ້າ ຍ້ອນເຮົາເປັນຫົນທາງຂອງພວກເຈົ້າ ແລະ ທຸກສິ່ງມີຢູ່ກໍຍ້ອນເຮົາ. ບໍ່ວ່າຊີວິດຂອງເຈົ້າຈະເຕີບໃຫຍ່ສໍ່າໃດກໍຕາມ, ເມື່ອເຈົ້າສາມາດອອກຫ່າງຈາກທາງໂລກ, ເມື່ອເຈົ້າສາມາດປະຖິ້ມຄວາມຮູ້ສຶກຂອງເຈົ້າ, ເມື່ອເຈົ້າສາມາດປະຖິ້ມສາມີ ແລະ ລູກໆຂອງເຈົ້າໄວ້ຢູ່ທາງຫຼັງ, ເມື່ອຊີວິດຂອງເຈົ້າເຕີບໃຫຍ່ຂຶ້ນ... ທຸກສິ່ງເຫຼົ່ານີ້ຈະເກີດຂຶ້ນຕາມການເວລາຂອງເຮົາ. ບໍ່ຈຳເປັນຕ້ອງກັງວົນໃຈ.

ເຈົ້າຕ້ອງບັນລຸທາງເຂົ້າຈາກດ້ານບວກ. ຖ້າເຈົ້າລໍຖ້າຢູ່ຊື່ໆ, ແລ້ວເຈົ້າກໍຍັງຢູ່ໃນດ້ານລົບ. ເຈົ້າຕ້ອງຫ້າວຫັນໃນການຮ່ວມມືກັບເຮົາ; ຈົ່ງດຸໝັ່ນ ແລະ ຢ່າຂີ້ຄ້ານຈັກເທື່ອ. ຈົ່ງຢູ່ໃນການສົນທະນາກັບເຮົາສະເໝີ ແລະ ມີຄວາມໃກ້ຊິດກັບເຮົາເລິກເຊິ່ງຍິ່ງຂຶ້ນ. ຖ້າເຈົ້າບໍ່ເຂົ້າໃຈ, ຢ່າໃຈຮ້ອນນຳຜົນຕາມມາທີ່ໄວ. ບໍ່ແມ່ນວ່າ ເຮົາຈະບໍ່ບອກເຈົ້າ; ມັນເປັນຍ້ອນວ່າ ເຮົາຕ້ອງການເບິ່ງວ່າ ເຈົ້າຈະເພິ່ງພາເຮົາ ຫຼື ບໍ່ ເມື່ອເຈົ້າຢູ່ຕໍ່ໜ້າເຮົາ ແລະ ເບິ່ງວ່າເຈົ້າຈະໝັ້ນໃຈໃນການເພິ່ງພາເຮົາ ຫຼື ບໍ່. ເຈົ້າຕ້ອງຢູ່ໃກ້ຊິດກັບເຮົາສະເໝີ ແລະ ວາງບັນຫາທັງໝົດໄວ້ໃນກຳມືຂອງເຮົາ. ຢ່າກັບໄປໃຫ້ສູນເປົ່າ. ຫຼັງຈາກເຈົ້າຢູ່ໃກ້ຊິດກັບ

ເຮົາຊົ່ວໄລຍະໃດໜຶ່ງໂດຍບໍ່ຮູ້ຕົວ, ເຈດຕະນາຂອງເຮົາກໍຈະເປີດເຜີຍຕໍ່ເຈົ້າ. ຖ້າເຈົ້າເຂົ້າໃຈສິ່ງເຫຼົ່ານັ້ນ, ແລ້ວເຈົ້າກໍຈະມາຢູ່ຕໍ່ໜ້າເຮົາຢ່າງແທ້ຈິງ ແລະ ເຈົ້າຈະພົບໜ້າຂອງເຮົາຢ່າງແທ້ຈິງ. ເຈົ້າຈະຊັດເຈນ ແລະ ໝັ້ນຄົງຢູ່ພາຍໃນຫຼາຍຂຶ້ນ ແລະ ເຈົ້າຈະມີສິ່ງໃຫ້ເພິ່ງພາ. ແລ້ວເຈົ້າກໍຍັງຈະມີອຳນາດພ້ອມທັງຄວາມໝັ້ນໃຈ ແລະ ເຈົ້າຈະມີເສັ້ນທາງໄປຂ້າງໜ້າ. ທຸກສິ່ງຈະມາຫາເຈົ້າຢ່າງງ່າຍດາຍ.

# ບົດທີ 10

ເຈົ້າບໍ່ຄວນຢ້ານຫັ້ນຢ້ານນີ້; ບໍ່ວ່າເຈົ້າອາດຈະພະເຊີນກັບຄວາມຫຍຸ້ງຍາກ ແລະ ໄພອັນຕະລາຍຫຼາຍສໍ່າໃດກໍ່ຕາມ, ເຈົ້າກໍຍັງສາມາດທີ່ຈະໝັ້ນຄົງຢູ່ຕໍ່ໜ້າເຮົາ; ຢ່າທໍ້ຖອຍໃນສິ່ງກີດຂວາງໃດໆເລີຍ ເພື່ອຄວາມປະສົງຂອງເຮົາອາດຈະໄດ້ຮັບການປະຕິບັດໂດຍບໍ່ມີຂໍ້ຈໍາກັດ. ນີ້ແມ່ນໜ້າທີ່ຂອງເຈົ້າ; ບໍ່ດັ່ງນັ້ນ ເຮົາຈະນໍາເອົາຄວາມໂກດຮ້າຍຂອງເຮົາມາສູ່ເຈົ້າ ແລະ ດ້ວຍມືຂອງເຮົາ ເຮົາຈະ... ແລ້ວເຈົ້າຈະອົດກັ້ນຕໍ່ຄວາມທຸກທໍລະມານທາງຈິດໃຈຢ່າງບໍ່ຈົບສິ້ນ. ເຈົ້າຕ້ອງອົດກັ້ນຕໍ່ທຸກຢ່າງ; ເພື່ອເຮົາແລ້ວ ເຈົ້າຕ້ອງກຽມພ້ອມທີ່ຈະປ່ອຍຖິ້ມທຸກສິ່ງທີ່ເຈົ້າມີ ແລະ ເຮັດທຸກສິ່ງຢ່າງທີ່ເຈົ້າສາມາດເຮັດໄດ້ ເພື່ອຕິດຕາມເຮົາ ແລະ ກຽມພ້ອມທີ່ຈະສະຫຼະທຸກສິ່ງທີ່ເຈົ້າມີ. ຕອນນີ້ແມ່ນເວລາທີ່ເຮົາຈະທົດສອບເຈົ້າ: ເຈົ້າຈະມອບຄວາມຊື່ສັດຂອງເຈົ້າໃຫ້ເຮົາບໍ? ເຈົ້າສາມາດຕິດຕາມເຮົາຈົນສຸດປາຍທາງຢ່າງຊື່ສັດໄດ້ບໍ? ຢ່າຢ້ານເລີຍ; ດ້ວຍການຊ່ວຍເຫຼືອຂອງເຮົາ, ແມ່ນໃຜທີ່ຈະສາມາດຂວາງທົ່ນທາງນີ້ໄດ້? ຈົ່ງຈື່ສິ່ງນີ້ໄວ້! ຢ່າລືມ! ທຸກສິ່ງທີ່ເກີດຂຶ້ນແມ່ນຍ້ອນເຈດຕະນາທີ່ດີຂອງເຮົາ ແລະ ທຸກຢ່າງແມ່ນຢູ່ພາຍໃຕ້ການສັງເກດການຂອງເຮົາ. ເຈົ້າສາມາດປະຕິບັດຕາມພຣະທໍາຂອງເຮົາໃນທຸກສິ່ງທີ່ເຈົ້າເວົ້າ ແລະ ກະທໍາໄດ້ບໍ? ເມື່ອການທົດລອງແຫ່ງໄຟໄດ້ມາເຖິງເຈົ້າ, ເຈົ້າຈະຄຸເຂົ່າລົງ ແລະ ຮ້ອງອອກມາບໍ? ຫຼື ເຈົ້າຈະຫົດໝອບ ໂດຍທີ່ບໍ່ສາມາດກ້າວໄປຂ້າງໜ້າບໍ?

ເຈົ້າຕ້ອງມີຄວາມກ້າຫານຂອງເຮົາໃນຕົວເຈົ້າ ແລະ ເຈົ້າຕ້ອງມີຫຼັກການ ເມື່ອເວົ້າເຖິງການພົບກັບຍາດພີ່ນ້ອງທີ່ບໍ່ມີຄວາມເຊື່ອ. ຢ່າງໃດກໍ່ຕາມ, ເພື່ອເຫັນແກ່ເຮົາ, ເຈົ້າຕ້ອງບໍ່ຍອມແພ້ໃຫ້ກັບກໍາລັງແຫ່ງຄວາມມືດເຊັ່ນກັນ. ຈົ່ງເພິ່ງພາສະຕິປັນຍາຂອງເຮົາເພື່ອຍ່າງຕາມເສັ້ນທາງທີ່ສົມບູນ; ຢ່າປ່ອຍໃຫ້ແຜນການໃດໆຂອງຊາຕານເລີ່ມມີຜົນ. ຈົ່ງທຸ້ມເທຄວາມພະຍາຍາມທັງໝົດຂອງເຈົ້າໃສ່ໃນການວາງຫົວໃຈຂອງເຈົ້າຕໍ່ໜ້າເຮົາ ແລະ ເຮົາຈະປອບໃຈເຈົ້າ ແລະ ນໍາເອົາຄວາມສະຫງົບ ແລະ ຄວາມສຸກມາໃຫ້ເຈົ້າ. ຈົ່ງຢ່າພະຍາຍາມເປັນຄົນແບບໃດໜຶ່ງເມື່ອຢູ່ຕໍ່ໜ້າຄົນອື່ນ; ການເຮັດໃຫ້ເຮົາພໍໃຈບໍ່ມີຄຸນຄ່າ ແລະ ນໍ້າໜັກຫຼາຍກວ່າບໍ? ໃນການເຮັດໃຫ້ເຮົາພໍໃຈນັ້ນ, ເຈົ້າຈະບໍ່ຍິ່ງເຕັມໄປດ້ວຍຄວາມສະຫງົບ ແລະ ຄວາມສຸກຊົ່ວນິດນິລັນ ແລະ ຕະຫຼອດຊີວິດບໍຫຼາຍຂຶ້ນບໍ? ຄວາມທົນທຸກໃນປັດຈຸບັນຂອງເຈົ້າ ພຽງແຕ່ບົ່ງບອກວ່າ ພຣະພອນໃນອະນາຄົດຂອງເຈົ້າຈະຍິ່ງໃຫຍ່ຫຼາຍສໍ່າໃດ; ພວກມັນບໍ່ສາມາດບັນລະຍາຍໄດ້ເລີຍ. ເຈົ້າບໍ່ຮູ້ຈັກຄວາມຍິ່ງໃຫຍ່ຂອງພອນທີ່ທີ່ເຈົ້າຈະໄດ້ຮັບ; ຍິ່ງໄປກວ່ານັ້ນ ເຈົ້າບໍ່ສາມາດຝັນເຖິງມັນໄດ້ເລີຍ. ໃນປັດຈຸບັນ ມັນໄດ້ກາຍເປັນຈິງແລ້ວ; ຊ່າງເປັນຈິງຫຼາຍແທ້ໆ! ສິ່ງນີ້ບໍ່ໄດ້ຢູ່ໄກເລີຍ ເຈົ້າສາມາດເຫັນມັນບໍ? ທຸກຊິ້ນສ່ວນຂອງສິ່ງນີ້ແມ່ນຢູ່ພາຍໃນຕົວເຮົາ; ທົ່ນທາງຂ້າງໜ້າຊ່າງສົດໃສແທ້! ຈົ່ງເຊັດນໍ້າຕາຂອງເຈົ້າ ແລະ ຢ່າຮູ້ສຶກເຖິງຄວາມເຈັບປວດ ຫຼື ຄວາມໂສກເສົ້າອີກຕໍ່ໄປ. ທຸກສິ່ງແມ່ນຖືກຈັດກຽມໂດຍມືຂອງເຮົາ ແລະ ເປົ້າໝາຍຂອງເຮົາກໍເພື່ອເຮັດໃຫ້ພວກເຈົ້າເປັນຜູ້ຊະນະໃນໄວໆນີ້ ແລະ ເພື່ອນໍາພວກເຈົ້າເຂົ້າສູ່ພຣະລັດສະໝີຄຽງຂ້າງເຮົາ. ສໍາລັບທຸກສິ່ງທີ່ເກີດຂຶ້ນກັບເຈົ້າ, ເຈົ້າຄວນມີຄວາມຍິນດີກັບມັນ ແລະ ມີຄວາມສັນລະເສີນຢ່າງເຕັມທີ່; ສິ່ງນັ້ນຈະເຮັດໃຫ້ເຮົາພໍໃຈເປັນຢ່າງຍິ່ງ.

ຊີວິດທີ່ເໜືອທຳມະຊາດໃນພຣະຄຣິດໄດ້ປະກົດຂຶ້ນແລ້ວ, ບໍ່ມີຫຍັງທີ່ເຈົ້າຕ້ອງຢ້ານ. ຊາຕານຢູ່ກ້ອງລຸ່ມຕີນຂອງພວກເຮົາແລ້ວ ແລະ ເວລາຂອງພວກມັນຈະບໍ່ສາມາດຢູ່ໄດ້ອີກດົນແລ້ວ. ຕື່ນຕົວໄດ້ແລ້ວ! ໃຫ້ປະຖິ້ມໂລກແຫ່ງຄວາມຜິດສິນທຳ; ຈົ່ງປົດປ່ອຍຕົວເອງຈາກເຫວເລິກແຫ່ງຄວາມຕາຍ! ຈົ່ງຊື່ສັດກັບເຮົາບໍ່ວ່າຫຍັງກໍຕາມ ແລະ ຈົ່ງກ້າວໄປທາງໜ້າດ້ວຍຄວາມກ້າຫານ; ເຮົາແມ່ນສິລາແຫ່ງຂວາມເຂັ້ມແຂວງຂອງເຈົ້າ, ສະນັ້ນ ຈົ່ງເພິ່ງພາເຮົາ!

# ບົດທີ 11

ເຮົາເປັນພຣະເຈົ້າຂອງເຈົ້າບໍ? ເຮົາເປັນກະສັດຂອງເຈົ້າບໍ? ເຈົ້າຍອມໃຫ້ເຮົາປົກຄອງໃນຕົວເຈົ້າດັ່ງກະສັດແທ້ບໍ? ເຈົ້າຄວນໄຕ່ຕອງກັບຕົນເອງໃຫ້ລະອຽດ. ເຈົ້າບໍ່ໄດ້ຄົ້ນຄວ້າ ແລະ ປະຕິເສດແສງສະຫວ່າງໃໝ່ບໍ ແລະ ເຖິງຂັ້ນວ່າຢຸດໂດຍບໍ່ຍອມຕິດຕາມມັນເມື່ອເວລາມັນມາບໍ? ຍ້ອນສິ່ງນີ້, ເຈົ້າຈະຜະເຊີນກັບການພິພາກສາ ແລະ ຕົກລົງສູ່ຄວາມພິນາດ; ເຈົ້າຈະຖືກພິພາກສາ ແລະ ຂ້ຽນຕີໂດຍຄ້ອນເຫຼັກ ແລະ ເຈົ້າຈະໄດ້ບໍ່ສຳຜັດກັບພາລະກິດຂອງພຣະວິນຍານບໍລິສຸດ. ອີກບໍ່ດົນ ເຈົ້າຈະຮ້ອງໄຫ້ ແລະ ຄຸເຂົ່າລົງນະມັດສະການພ້ອມຮ້ອງໄຫ້ອອກມາສຽງດັງ. ເຮົາໄດ້ບອກພວກເຈົ້າຢູ່ສະເໝີ, ເຮົາໄດ້ກ່າວກັບພວກເຈົ້າຢູ່ຕະຫຼອດເວລາ; ເຮົາໄດ້ບໍ່ເຄີຍກັກຕວງພຣະທຳຂອງເຮົາກັບພວກເຈົ້າ. ໃຫ້ທົບທວນເບິ່ງ: ມີເວລາໃດບໍທີ່ເຮົາເຄີຍລົ້ມເຫຼວໃນການບອກບາງສິ່ງແກ່ພວກເຈົ້າ? ເຖິງຢ່າງນັ້ນກໍຕາມ, ຍັງມີບາງຄົນທີ່ດື້ເຮັດສິ່ງຕ່າງໆໃນທາງທີ່ຜິດ. ພວກເຂົາຫຼົງໄຫຼຢູ່ໃນຄວາມມືດຂອງຂໍ້ສົງໄສທີ່ປິດບັງດວງຕາເວັນ ແລະ ພວກເຂົາບໍ່ເຄີຍເຫັນແສງສະຫວ່າງຈັກເທື່ອເລີຍ. ນີ້ບໍ່ແມ່ນຍ້ອນຄວາມຮູ້ສຶກຂອງພວກເຂົາກ່ຽວກັບ “ຕົນເອງ” ຫຼາຍເກີນໄປບໍ ແລະ ແນວຄິດຂອງພວກເຂົາຍິ່ງໃຫຍ່ເກີນໄປບໍ? ເຈົ້າມີຄວາມນັບຖືໃຫ້ແກ່ເຮົານັບແຕ່ຕອນໃດ? ເຈົ້າມີຫ້ອງຫົວໃຈສຳລັບເຮົານັບແຕ່ຕອນໃດ? ເມື່ອເຈົ້າລົ້ມເຫຼວ, ເມື່ອເຈົ້າພົບວ່າຕົນເອງບໍ່ມີຄວາມສາມາດ ແລະ ເມື່ອເຈົ້າບໍ່ມີທາງເລືອກແທ້ໆ, ເມື່ອນັ້ນ ເຈົ້າຈຶ່ງອະທິຖານຫາເຮົາ. ເປັນແບບນັ້ນກໍ່ດີ, ແລ້ວເປັນຫຍັງໃນຕອນນີ້ ເຈົ້າຈຶ່ງບໍ່ເຮັດສິ່ງຕ່າງໆດ້ວຍຕົນເອງ? ພວກເຈົ້າ ມະນຸດເອີຍ! ມັນຄືຕົວຕົນດັ່ງເດີມທີ່ໄດ້ທຳລາຍເຈົ້າ!

ບາງຄົນບໍ່ສາມາດພົບເຫັນເສັ້ນທາງ ແລະ ພວກເຂົາບໍ່ສາມາດນຳທັນແສງສະຫວ່າງໃໝ່ໄດ້. ພວກເຂົາພຽງແຕ່ສົນທະນາ ກ່ຽວກັບສິ່ງເຫຼົ່ານັ້ນທີ່ພວກເຂົາໄດ້ເຫັນຜ່ານມາ; ບໍ່ມີຫຍັງໃໝ່ສຳລັບພວກເຂົາ. ເປັນຫຍັງຈຶ່ງເປັນແບບນັ້ນ? ເຈົ້າດຳລົງຊີວິດຢູ່ກັບຕົນເອງ ແລະ ໄດ້ປິດປະຕູໃສ່ເຮົາ. ເມື່ອເຫັນວິທີການແຫ່ງພາລະກິດຂອງພຣະວິນຍານບໍລິສຸດປ່ຽນແປງ, ໃນຫົວໃຈຂອງເຈົ້າແລ້ວ ເຈົ້າກໍຍັງລະມັດລະວັງຫຼາຍຢ້ານຜິດຢູ່ສະເໝີ. ການເຄົາລົບບູຊາພຣະເຈົ້າຂອງເຈົ້າຢູ່ໃສ? ເຈົ້າໄດ້ສະແຫວງຫາສິ່ງນັ້ນດ້ວຍຄວາມສະຫງົບຢູ່ຕໍ່ໜ້າພຣະເຈົ້າແລ້ວບໍ? ເຈົ້າພຽງແຕ່ສົງໄສວ່າ “ພຣະວິນຍານບໍລິສຸດປະຕິບັດພາລະກິດແບບນັ້ນແທ້ບໍ?” ສິ່ງທີ່ບາງຄົນໄດ້ເຫັນ ແມ່ນພາລະກິດຂອງພຣະວິນຍານບໍລິສຸດແທ້, ແຕ່ເຖິງຢ່າງນັ້ນກໍຕາມ ພວກເຂົາກໍຍັງມີແນວເວົ້າກ່ຽວກັບພາລະກິດນັ້ນ; ຄົນອື່ນໆຮັບຮູ້ວ່າ ມັນຄືພຣະທຳຂອງພຣະເຈົ້າ, ແຕ່ພວກເຂົາກໍບໍ່ຍອມຮັບເອົາພຣະທຳນັ້ນ. ແນວຄວາມຄິດຕ່າງໆຜຸດຂຶ້ນມາໃນພວກເຂົາແຕ່ລະຄົນ ແລະ ພວກເຂົາກໍບໍ່ເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດ. ພວກເຂົາປະໝາດ ແລະ ບໍ່ໃສ່ໃຈ, ບໍ່ເຕັມໃຈທີ່ຈະຈ່າຍລາຄາ ແລະ ຈິງໃຈໃນການສະຖິດຂອງເຮົາ. ພຣະວິນຍານບໍລິສຸດໄດ້ສ່ອງແສງສະຫວ່າງໃຫ້ກັບພວກເຂົາ, ແຕ່ພວກເຂົາຈະບໍ່ມາຢູ່ຕໍ່ໜ້າເຮົາ ເພື່ອໂອ້ລົມ ຫຼື ສະແຫວງຫາ. ກົງກັນຂ້າມ, ພວກເຂົາປະຕິບັດຕາມຄວາມປາຖະໜາຂອງພວກເຂົາເອງ ໂດຍເຮັດສິ່ງໃດກໍຕາມທີ່ພວກເຂົາພໍໃຈ; ນີ້ແມ່ນເຈດຕະນາແບບໃດ?

# ບົດທີ 12

ຖ້າເຈົ້າມີອຸປະນິໄສທີ່ບໍ່ໝັ້ນຄົງທີ່ພັດມາທາງນີ້ ຫຼື ທາງນັ້ນຄືກັບລົມ ແລະ ຝົນ ແລະ ຖ້າເຈົ້າບໍ່ສາມາດກ້າວໄປຂ້າງໜ້າດ້ວຍສຸດແຮງຂອງເຈົ້າແລ້ວ, ໄມ້ແສ້ຂອງເຮົາກໍຈະບໍ່ຢູ່ໄກຈາກເຈົ້າຈັກເທື່ອ. ເມື່ອເຈົ້າຖືກຈັດການ, ຍິ່ງສະພາບແວດລ້ອມຮ້າຍແຮງຂຶ້ນເທົ່າໃດ ແລະ ຍິ່ງເຈົ້າຖືກຂົ່ມເຫັງຫຼາຍເທົ່າໃດ, ຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າກໍຍິ່ງຫຼາຍຂຶ້ນເທົ່ານັ້ນ ແລະ ເຈົ້າຈະເຊົາຍຶດຕິດກັບໂລກ. ເຈົ້າຈະມາຫາເຮົາ ແລະ ຟື້ນຄືນຄວາມແຂງແຮງ ແລະ ຄວາມໝັ້ນໃຈຂອງເຈົ້າຄືນ ໂດຍບໍ່ມີທາງເລືອກອື່ນຢູ່ຂ້າງໜ້າ. ແນວໃດກໍຕາມ, ເຈົ້າຈະດຳເນີນໄປຢ່າງບໍ່ມີຈຸດໝາຍປາຍທາງໃນສະພາບແວດລ້ອມທີ່ງ່າຍຂຶ້ນ. ເຈົ້າຕ້ອງເຂົ້າຈາກດ້ານບວກ; ຈົ່ງຫ້າວຫັນ ແລະ ບໍ່ກຽດຄ້ານ. ເຈົ້າຕ້ອງບໍ່ຫວັ່ນໄຫວກັບໃຜ ຫຼື ສິ່ງໃດ ໃນທຸກສະຖານະການ ແລະ ເຈົ້າຕ້ອງບໍ່ໄດ້ຮັບອິດທິພົນຈາກຄຳເວົ້າຂອງຜູ້ໃດ. ເຈົ້າຕ້ອງມີອຸປະນິໄສທີ່ໝັ້ນຄົງ; ບໍ່ວ່າຄົນຈະເວົ້າຫຍັງກໍຕາມ, ເຈົ້າຕ້ອງນຳສິ່ງທີ່ເຈົ້າຮູ້ວ່າເປັນຄວາມຈິງໄປປະຕິບັດທັນທີ. ເຈົ້າຕ້ອງໃຫ້ພຣະທຳຂອງເຮົາເຮັດວຽກຢູ່ຂ້າງໃນຕົວເຈົ້າຢູ່ສະເໝີ, ບໍ່ວ່າເຈົ້າອາດຈະປະເຊີນໜ້າກັບໃຜກໍຕາມ; ເຈົ້າຕ້ອງສາມາດຍຶດໝັ້ນໃນການເປັນພະຍານຂອງເຈົ້າໃຫ້ແກ່ເຮົາ ແລະ ຄຳນຶງເຖິງພາລະຂອງເຮົາ. ເຈົ້າຕ້ອງບໍ່ເຫັນດີຢ່າງຕາບອດກັບຄົນອື່ນໂດຍບໍ່ມີຄວາມຄິດເປັນຂອງຕົວເອງ; ກົງກັນຂ້າມ, ເຈົ້າຕ້ອງມີຄວາມກ້າຫານທີ່ຈະຢືນຂຶ້ນ ແລະ ຄັດຄ້ານສິ່ງເຫຼົ່ານັ້ນທີ່ບໍ່ສອດຄ່ອງກັບຄວາມຈິງ. ຖ້າເຈົ້າຮູ້ຢ່າງຊັດເຈນວ່າບາງສິ່ງຜິດພາດ, ແຕ່ເຈົ້າກໍຍັງຂາດຄວາມກ້າທີ່ຈະເປີດໂປງມັນ, ແລ້ວເຈົ້າກໍບໍ່ແມ່ນຜູ້ທີ່ປະຕິບັດຄວາມຈິງ. ເຈົ້າຕ້ອງການເວົ້າບາງຢ່າງ, ແຕ່ບໍ່ກ້າອອກມາພ້ອມກັບມັນ, ດັ່ງນັ້ນເຈົ້າຈຶ່ງເວົ້າອ້ອມແລ້ວກໍປ່ຽນເລື່ອງ; ຊາຕານແມ່ນຢູ່ພາຍໃຈໂຕເຈົ້າໂດຍທີ່ຫ່ວງດຶງເຈົ້າໄວ້ ເຊິ່ງເຮັດໃຫ້ເຈົ້າເວົ້າໂດຍບໍ່ມີຜົນຫຍັງ ແລະ ບໍ່ສາມາດອົດທົນຈົນເຖິງທີ່ສຸດ. ເຈົ້າຍັງມີຄວາມຢ້ານຢູ່ໃນໃຈເຈົ້າຢູ່ ແລະ ນີ້ບໍ່ແມ່ນຍ້ອນຫົວໃຈຂອງເຈົ້າບໍ່ໄດ້ເຕັມໄປດ້ວຍແນວຄິດຂອງຊາຕານບໍ?

ຜູ້ເອົາຊະນະແມ່ນຫຍັງ? ທະຫານທີ່ດີຂອງພຣະຄຣິດຕ້ອງກ້າຫານ ແລະ ເພິ່ງພາເຮົາເພື່ອໃຫ້ເຂັ້ມແຂງຝ່າຍວິນຍານ; ພວກເຂົາຕ້ອງຕໍ່ສູ້ເພື່ອກາຍເປັນນັກຮົບ ແລະ ສູ້ຮົບກັບຊາຕານຈົນເຖິງຕາຍ. ເຈົ້າຕ້ອງຕື່ນຕົວຢູ່ສະເໝີ ແລະ ນີ້ແມ່ນເຫດຜົນວ່າເປັນຫຍັງເຮົາຈຶ່ງຂໍໃຫ້ເຈົ້າຮ່ວມມືກັບເຮົາຢ່າງຫ້າວຫັນຢູ່ທຸກຊ່ວງເວລາ ແລະ ຮຽນຮູ້ທີ່ເຈົ້າຫຍັບເຂົ້າໃກ້ເຮົາຫຼາຍຂຶ້ນ. ຖ້າເຈົ້າສາມາດສະຫງົບງຽບຢູ່ຕໍ່ໜ້າເຮົາໃນທຸກເວລາ ແລະ ທຸກສະຖານະການ, ຟັງຄຳເວົ້າຂອງເຮົາ ແລະ ໃຫ້ຄວາມສຳຄັນກັບພຣະທຳ ແລະ ການກະທຳຂອງເຮົາ, ແລ້ວເຈົ້າກໍຈະບໍ່ຫວັ່ນໄຫວ ແລະ ສູນເສຍທີ່ໝັ້ນຂອງເຈົ້າ. ສິ່ງໃດກໍຕາມທີ່ເຈົ້າໄດ້ຮັບຈາກພາຍໃນເຮົາກໍສາມາດປະຕິບັດໄດ້. ພຣະທຳຂອງເຮົາທຸກຄຳແມ່ນແນໃສ່ສະພາວະຂອງເຈົ້າ ແລະ ພວກມັນແທງທະລຸຫົວໃຈຂອງເຈົ້າ. ເຖິງແມ່ນວ່າເຈົ້າອາດຈະປະຕິເສດພວກມັນທາງຄຳເວົ້າ, ແຕ່ໃນໃຈເຈົ້າບໍ່ສາມາດປະຕິເສດພວກມັນໄດ້. ຍິ່ງໄປກວ່ານັ້ນ, ຖ້າເຈົ້າວິເຄາະພຣະທຳຂອງເຮົາ, ເຈົ້າຈະຖືກພິພາກສາ. ນັ້ນກໍຄື ພຣະທຳຂອງເຮົາແມ່ນຄວາມຈິງ, ຊີວິດ ແລະ ຫົນທາງ; ພວກມັນແມ່ນດາບສອງຄົມທີ່ແຫຼມ ແລະ ພວກມັນສາມາດເອົາຊະນະຊາຕານໄດ້. ບັນດາຜູ້ທີ່ເຂົ້າໃຈ ແລະ ມີຫົນທາງ

ສູ່ການປະຕິບັດພຣະທຳຂອງເຮົາກໍໄດ້ຮັບພອນ ແລະ ບັນດາຜູ້ທີ່ບໍ່ປະຕິບັດຕາມພວກມັນຈະຖືກພິພາກສາຢ່າງບໍ່ຕ້ອງສົງໄສ; ສິ່ງນີ້ແມ່ນເປັນຈິງຫຼາຍ. ທຸກມື້ນີ້ ຂອບເຂດຂອງຜູ້ທີ່ຖືກເຮົາຕັດສິນແຜ່ກວ້າງອອກ: ບໍ່ສະເພາະແຕ່ຜູ້ທີ່ຮູ້ຈັກເຮົາເທົ່ານັ້ນທີ່ຈະຖືກຕັດສິນ, ແຕ່ຜູ້ທີ່ບໍ່ເຊື່ອໃນເຮົາ ແລະ ຜູ້ທີ່ພະຍາຍາມສຸດຄວາມສາມາດຂອງພວກເຂົາເພື່ອຕໍ່ຕ້ານ ແລະ ຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດກໍຈະຖືກພິພາກສາເຊັ່ນກັນ. ທຸກຄົນທີ່ຢູ່ຕໍ່ໜ້າເຮົາ ຜູ້ທີ່ກຳລັງຕິດຕາມບາດກ້າວຂອງເຮົາຈະເຫັນວ່າພຣະເຈົ້າແມ່ນໄຟທີ່ລຸກໄໝ້! ພຣະເຈົ້າຊ່າງສະຫງ່າຜ່າເຜີຍ! ພຣະອົງກຳລັງປະຕິບັດການພິພາກສາຂອງພຣະອົງ ແລະ ຕັດສິນປະຫານຊີວິດພວກເຂົາ. ບັນດາຜູ້ທີ່ຢູ່ໃນຄຣິສຕະຈັກທີ່ບໍ່ໃສ່ໃຈປະຕິບັດຕາມພາລະກິດຂອງພຣະວິນຍານບໍລິສຸດ, ຜູ້ທີ່ຂັດຂວາງພາລະກິດດັ່ງກ່າວ, ຜູ້ທີ່ໂອ້ອວດ, ຜູ້ທີ່ມີເຈດຕະນາ ແລະ ເປົ້າໝາຍທີ່ບໍ່ຖືກຕ້ອງ, ຜູ້ທີ່ບໍ່ມີຄວາມພະຍາຍາມໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຜູ້ທີ່ສັບສົນ ແລະ ມີຄວາມສົງໄສ, ຜູ້ທີ່ກວດສອບພາລະກິດຂອງພຣະວິນຍານບໍລິສຸດ, ພຣະທຳແຫ່ງການພິພາກສາຈະມາເຖິງຄົນເຫຼົ່ານີ້ໃນເວລາໃດກໍໄດ້. ການກະທຳທັງໝົດຂອງຄົນຈະຖືກເປີດເຜີຍອອກ. ພຣະວິນຍານບໍລິສຸດຄົ້ນຫາຫົວໃຈສ່ວນເລິກທີ່ສຸດຂອງຄົນ, ດັ່ງນັ້ນ ຈົ່ງຢ່າເຮັດບໍ່ສົນໃຈເລີຍ; ໃຫ້ຮອບຄອບ ແລະ ລະມັດລະວັງ. ຢ່າເຮັດຫຍັງດ້ວຍຕົວເອງຢ່າງຕາບອດ. ຖ້າການກະທຳຂອງເຈົ້າບໍ່ສອດຄ່ອງກັບພຣະທຳຂອງເຮົາ, ແລ້ວເຈົ້າກໍຈະຖືກພິພາກສາ. ມັນບໍ່ມີປະໂຫຍດທີ່ຈະຮຽນແບບ, ທ່າທີ່ວ່າມີເຫດຜົນ ຫຼື ບໍ່ເຂົ້າໃຈຢ່າງແທ້ຈິງ; ເຈົ້າຕ້ອງມາຢູ່ຕໍ່ໜ້າເຮົາ ແລະ ສື່ສານກັບເຮົາເລື້ອຍໆ.

ບໍ່ວ່າເຈົ້າຈະເອົາຫຍັງຈາກເຮົາໄປ ມັນກໍຈະມອບເສັ້ນທາງປະຕິບັດໃຫ້ແກ່ເຈົ້າ. ເຈົ້າຍັງຈະມາພ້ອມກັບອຳນາດຂອງເຮົາ, ມີການສະຖິດຢູ່ຂອງເຮົາ ແລະ ຍ່າງໃນພຣະທຳຂອງເຮົາຢູ່ສະເໝີ; ເຈົ້າຈະຢູ່ເໜືອທຸກສິ່ງທາງໂລກ ແລະ ມີອຳນາດແຫ່ງການເປັນຄືນມາ. ຖ້າເຈົ້າບໍ່ມີພຣະທຳຂອງເຮົາ ແລະ ການສະຖິດຂອງເຮົາໃນຄຳເວົ້າ, ພຶດຕິກຳ ແລະ ການກະທຳຂອງເຈົ້າ ແລະ ຖ້າເຈົ້າຕີໂຕອອກຫ່າງຈາກເຮົາ ແລະ ມີຊີວິດຢູ່ໃນຕົວເຈົ້າເອງ, ຢູ່ໃນແນວຄິດຂອງຈິດໃຈ ແລະ ໃນຫຼັກຄຳສອນ ແລະ ກົດເກນຕ່າງໆ, ແລ້ວນັ້ນເປັນຂໍ້ພິສູດວ່າເຈົ້າໄດ້ຕັ້ງໃຈເຮັດບາບ. ເວົ້າອີກຢ່າງໜຶ່ງວ່າ ເຈົ້າຍັງຄົງຍຶດໝັ້ນໃນຕົວຕົນເກົ່າຂອງເຈົ້າ ໂດຍບໍ່ຍອມໃຫ້ໃຜມາທຳຮ້າຍຕົວເຈົ້າ ຫຼື ທຳຮ້າຍຈິດໃຈຂອງເຈົ້າແມ່ນແຕ່ໜ້ອຍເລີຍ. ຄົນທີ່ເຮັດແບບນີ້ມີຄວາມສາມາດຕໍ່າຫຼາຍ ແລະ ຂ້ອນຂ້າງເປັນຄົນໄຮ້ເຫດຜົນ ແລະ ພວກເຂົາບໍ່ສາມາດເຫັນພຣະຄຸນຂອງພຣະເຈົ້າ ຫຼື ຮັບຮູ້ພອນຂອງພຣະອົງ. ຖ້າເຈົ້າຍັງສືບຕໍ່ປະພຶດຕົວຢ່າງຫຼີກຫຼ່ຽງແບບນັ້ນ, ແລ້ວເມື່ອໃດເຈົ້າຈຶ່ງຈະສາມາດໃຫ້ເຮົາປະຕິບັດພາລະກິດໃນຕົວເຈົ້າໄດ້? ຫຼັງຈາກທີ່ເຮົາກ່າວແລ້ວ, ເຈົ້າໄດ້ຟັງ ແຕ່ບໍ່ໄດ້ຮັບຫຍັງເລີຍ ແລະ ເຈົ້າອ່ອນແອເປັນພິເສດ ເມື່ອໃດກໍຕາມທີ່ບັນຫາຂອງເຈົ້າຖືກບົ່ງຊີ້ອອກແທ້ໆ. ນັ້ນແມ່ນວຸດທິພາວະແບບໃດ? ເມື່ອໃດເຮົາຈຶ່ງສາມາດເຮັດໃຫ້ເຈົ້າສົມບູນໄດ້ ຖ້າເຈົ້າຕ້ອງຖືກຊັກຊວນຢູ່ສະເໝີ? ຖ້າເຈົ້າຢ້ານການຕຳ ແລະ ການຂູດຂີດ, ເຈົ້າກໍຕ້ອງຝ້າວເຕືອນຄົນອື່ນໆວ່າ "ຂ້ານ້ອຍຈະບໍ່ຍອມໃຫ້ໃຜຈັດການກັບຂ້ານ້ອຍ; ຂ້ານ້ອຍສາມາດກຳຈັດອຸປະນິໄສທຳມະຊາດເກົ່າໆຂອງຂ້ານ້ອຍໄດ້ດ້ວຍຕົວຂ້ານ້ອຍເອງ". ສະນັ້ນ, ຈະບໍ່ມີໃຜວິຈານເຈົ້າ ຫຼື ແຕະຕ້ອງເຈົ້າ ແລະ ເຈົ້າຈະມີອິດສະຫຼະທີ່ຈະເຊື່ອທາງໃດກໍໄດ້ຕາມໃຈເຈົ້າໂດຍບໍ່ມີໃຜສົນໃຈເຈົ້າ. ເຈົ້າສາມາດ

ຍ່າງຕາມບາດກ້າວຂອງເຮົາແບບນີ້ໄດ້ບໍ? ການອ້າງວ່າເຈົ້າແນ່ໃຈວ່າເຮົາແມ່ນພຣະເຈົ້າຂອງເຈົ້າ ແລະ ພຣະຜູ້ເປັນເຈົ້າຂອງເຈົ້ານັ້ນກໍເປັນພຽງຄຳເວົ້າທີ່ວ່າງເປົ່າ. ຖ້າເຈົ້າບໍ່ມີຄວາມສົງໄສແທ້ໆ, ສິ່ງເຫຼົ່ານີ້ກໍຈະບໍ່ເປັນບັນຫາ ແລະ ເຈົ້າຈະເຊື່ອວ່າມັນແມ່ນຄວາມຮັກ ແລະ ພອນຂອງພຣະເຈົ້າທີ່ມາຫາເຈົ້າ. ເມື່ອເຮົາກ່າວ ມັນແມ່ນສຳລັບລູກຊາຍຂອງເຮົາ ແລະ ພຣະທຳຂອງເຮົາຄວນໄດ້ຮັບການຂອບໃຈ ແລະ ຄຳສັນລະເສີນ.

# ບົດທີ 13

ໃນສະພາບປັດຈຸບັນຂອງພວກເຈົ້າ, ພວກເຈົ້າຍຶດໝັ້ນໃນແນວຄວາມຄິດຂອງຕົວເອງຫຼາຍເກີນໄປ ແລະ ມີຄວາມວຸ້ນວາຍທາງສາສະໜາທີ່ຂ້ອນຂ້າງຮ້າຍແຮງຢູ່ໃນຕົວພວກເຈົ້າ. ເຈົ້າບໍ່ສາມາດປະຕິບັດໃນວິນຍານ, ເຈົ້າບໍ່ສາມາດເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຈົ້າປະຕິເສດແສງສະຫວ່າງໃໝ່. ເຈົ້າບໍ່ສາມາດເຫັນດວງອາທິດໃນຍາມກາງເວັນ ຍ້ອນວ່າເຈົ້າຕາບອດ, ເຈົ້າບໍ່ຮູ້ຈັກຜູ້ຄົນ, ເຈົ້າບໍ່ສາມາດໜີຈາກ "ພໍ່ແມ່" ຂອງເຈົ້າໄດ້, ເຈົ້າຂາດການຢັ່ງຮູ້ທາງຝ່າຍວິນຍານ, ເຈົ້າບໍ່ຮັບຮູ້ພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຈົ້າກໍບໍ່ມີຄວາມຄິດວ່າຈະກິນ ແລະ ດື່ມພຣະທຳຂອງເຮົາແນວໃດ. ມັນແມ່ນບັນຫາທີ່ເຈົ້າບໍ່ຮູ້ວ່າຈະກິນ ແລະ ດື່ມມັນດ້ວຍຕົວເຈົ້າເອງແນວໃດ. ພາລະກິດຂອງພຣະວິນຍານບໍລິສຸດກ້າວໄປຂ້າງໜ້າດ້ວຍຄວາມໄວທີ່ໜ້າຕົກໃຈທຸກໆວັນ; ມີແສງສະຫວ່າງໃໝ່ທຸກໆວັນ ແລະ ກໍມີສິ່ງສົດໃໝ່ທຸກໆວັນອີກດ້ວຍ. ແນວໃດກໍຕາມ, ເຈົ້າບໍ່ເຂົ້າໃຈດອກ. ກົງກັນຂ້າມ, ເຈົ້າມັກເຮັດການຄົ້ນຄວ້າ, ເຈົ້າແນມເບິ່ງສິ່ງຕ່າງໆຜ່ານເລນຄວາມມັກສ່ວນຕົວຂອງເຈົ້າໂດຍບໍ່ໄດ້ພິຈາລະນາພວກມັນຢ່າງຮອບຄອບ ແລະ ເຈົ້າກໍຟັງດ້ວຍຄວາມມືນງົງ. ເຈົ້າບໍ່ໄດ້ອະທິຖານດ້ວຍຈິດວິນຍານຢ່າງດຸໝັ່ນ ແລະ ເຈົ້າກໍບໍ່ໄດ້ແນມຫາເຮົາ ຫຼື ໄຕ່ຕອງພຣະທຳຂອງເຮົາຫຼາຍຂຶ້ນ. ສະນັ້ນ, ທຸກສິ່ງທີ່ເຈົ້າມີແມ່ນໜັງສື, ກົດ ແລະ ຫຼັກຄຳສອນ. ເຈົ້າຕ້ອງມີຄວາມຄິດທີ່ຊັດເຈນກ່ຽວກັບວິທີກິນ ແລະ ດື່ມພຣະທຳຂອງເຮົາ ແລະ ເຈົ້າຕ້ອງນຳເອົາພຣະທຳຂອງເຮົາມາຢູ່ຕໍ່ໜ້າເຮົາເລື້ອຍໆ.

ຄົນທຸກມື້ນີ້ບໍ່ສາມາດສະຫຼະຕົນເອງໄດ້; ພວກເຂົາຄິດຢູ່ສະເໝີວ່າພວກເຂົາຖືກ. ພວກເຂົາຕິດຢູ່ໃນໂລກນ້ອຍໆຂອງພວກເຂົາເອງ ແລະ ພວກເຂົາບໍ່ແມ່ນປະເພດຄົນທີ່ຖືກຕ້ອງ. ພວກເຂົາມີເຈດຕະນາ ແລະ ວັດຖຸປະສົງທີ່ຜິດ ແລະ ຖ້າພວກເຂົາຍັງສານຕໍ່ສິ່ງເຫຼົ່ານີ້, ພວກເຂົາກໍຈະຖືກພິພາກສາຢ່າງແນ່ນອນ ແລະ ໃນກໍລະນີຮ້າຍແຮງ ພວກເຂົາຈະຖືກກຳຈັດ. ເຈົ້າຕ້ອງພະຍາຍາມຫຼາຍຂຶ້ນໃນການຮັກສາການສົນທະນາທີ່ຕໍ່ເນື່ອງກັບເຮົາ ແລະ ບໍ່ແມ່ນພຽງແຕ່ການສົນທະນາກັບໃຜກໍຕາມທີ່ເຈົ້າຕ້ອງການ. ເຈົ້າຕ້ອງມີຄວາມເຂົ້າໃຈກ່ຽວກັບຄົນທີ່ເຈົ້າສົນທະນານຳ ແລະ ເຈົ້າຕ້ອງສົນທະນາກ່ຽວກັບເລື່ອງຝ່າຍວິນຍານໃນຊີວິດ; ເມື່ອນັ້ນເທົ່ານັ້ນເຈົ້າຈຶ່ງຈະສາມາດສະໜອງຊີວິດໃຫ້ແກ່ຄົນອື່ນ ແລະ ຕອບສະໜອງຄວາມຂາດເຂີນຂອງພວກເຂົາໄດ້. ເຈົ້າບໍ່ຄວນເວົ້າກັບພວກເຂົາດ້ວຍນໍ້າສຽງການບັນຍາຍ; ໂດຍພື້ນຖານແລ້ວ, ນັ້ນແມ່ນຕຳແໜ່ງທີ່ຜິດທີ່ມີ. ໃນການສົນທະນາ, ເຈົ້າຕ້ອງມີຄວາມເຂົ້າໃຈກ່ຽວກັບເລື່ອງຝ່າຍວິນຍານ, ເຈົ້າຕ້ອງມີສະຕິປັນຍາ ແລະ ເຈົ້າຕ້ອງສາມາດເຂົ້າໃຈສິ່ງທີ່ຢູ່ໃນໃຈຂອງຄົນ. ຖ້າເຈົ້າຕ້ອງຮັບໃຊ້ຄົນອື່ນ, ເຈົ້າກໍຕ້ອງເປັນຄົນປະເພດທີ່ຖືກຕ້ອງ ແລະ ເຈົ້າຕ້ອງສົນທະນາດ້ວຍທຸກສິ່ງທີ່ເຈົ້າມີ.

ສິ່ງສຳຄັນໃນຕອນນີ້ແມ່ນໃຫ້ເຈົ້າສາມາດສົນທະນາກັບເຮົາ, ສື່ສານກັບເຮົາຢ່າງໃກ້ຊິດ, ກິນ ແລະ ດື່ມດ້ວຍຕົນເອງ ແລະ ໄດ້ໃກ້ຊິດກັບພຣະເຈົ້າ. ເຈົ້າຕ້ອງເຂົ້າໃຈເລື່ອງຝ່າຍວິນຍານໃຫ້ໄວເທົ່າທີ່ຈະໄວໄດ້ ແລະ ເຈົ້າຕ້ອງສາມາດເຂົ້າໃຈສະພາບແວດລ້ອມຂອງເຈົ້າເອງ ແລະ ສິ່ງທີ່ຖືກຈັດຕຽມໄວ້

ອ້ອມຮອບຕົວເຈົ້າຢ່າງແຈ່ມແຈ້ງ. ເຈົ້າສາມາດເຂົ້າໃຈສິ່ງທີ່ເຮົາເປັນໄດ້ບໍ? ມັນສຳຄັນທີ່ເຈົ້າກິນ ແລະ ດື່ມອີງຕາມສິ່ງທີ່ເຈົ້າຂາດ ແລະ ດຳລົງຊີວິດໂດຍພຣະທຳຂອງເຮົາ! ຈົ່ງຮັບຮູ້ມືຂອງເຮົາ ແລະ ຢ່າຈົ່ມວ່າ. ຖ້າເຈົ້າຈົ່ມວ່າ ແລະ ໜີໄປ, ເຈົ້າອາດຈະເສຍໂອກາດທີ່ຈະໄດ້ຮັບພຣະຄຸນຂອງພຣະເຈົ້າ. ເລີ່ມດ້ວຍການຫຍັບເຂົ້າໃກ້ເຮົາ: ແມ່ນຫຍັງທີ່ເຈົ້າຂາດຫາຍຢູ່ ແລະ ເຈົ້າຄວນເຂົ້າໃກ້ເຮົາ ແລະ ເຂົ້າໃຈຫົວໃຈຂອງເຮົາແນວໃດ? ມັນເປັນການຍາກສຳລັບຄົນທີ່ຈະເຂົ້າມາໃກ້ເຮົາ ຍ້ອນວ່າພວກເຂົາບໍ່ສາມາດສະຫຼະຕົວເອງ. ນິໄສຂອງພວກເຂົາບໍ່ໝັ້ນຄົງ, ປ່ຽນທັດສະນະຄະຕິຢູ່ຕະຫຼອດ ແລະ ຄົນເຫຼົ່ານີ້ກາຍເປັນຄົນຍິ່ງ ແລະ ພໍໃຈໃນຕົວເອງເມື່ອພວກເຂົາໄດ້ຊີມລົດຊາດຄວາມຫວານເລັກນ້ອຍ. ບາງຄົນຍັງບໍ່ທັນຕື່ນຕົວເທື່ອ; ສິ່ງທີ່ເຈົ້າເວົ້າສະແດງອອກໃຫ້ເຫັນເຖິງສິ່ງທີ່ເຈົ້າເປັນຫຼາຍປານໃດ? ມັນປ້ອງກັນຕົວເອງຫຼາຍປານໃດ, ມັນຮຽນແບບຄົນອື່ນຫຼາຍປານໃດ ແລະ ມັນປະຕິບັດຕາມກົດຫຼາຍປານໃດ? ເຫດຜົນທີ່ເຈົ້າບໍ່ສາມາດຮູ້ຊຶ້ງ ແລະ ເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດແມ່ນເຈົ້າບໍ່ຮູ້ຈັກວິທີເຂົ້າໃກ້ເຮົາ. ພາຍນອກ, ເຈົ້າກຳລັງຄິດໄຕ່ຕອງສິ່ງຕ່າງໆຢູ່ສະເໝີ, ອີງໃສ່ແນວຄວາມຄິດຂອງຕົນເອງ ແລະ ຈິດໃຈຂອງເຈົ້າ; ເຈົ້າຄົ້ນຄວ້າຢ່າງລັບໆ ແລະ ມີສ່ວນຮ່ວມໃນແຜນການຍ່ອຍ ແລະ ເຈົ້າບໍ່ສາມາດແມ່ນແຕ່ເອົາພວກມັນອອກມາໃນທີ່ໂລ່ງ. ນີ້ສະແດງໃຫ້ເຫັນວ່າເຈົ້າບໍ່ເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດແທ້ໆ. ຖ້າເຈົ້າຮູ້ແທ້ໆວ່າບາງສິ່ງບໍ່ໄດ້ມາຈາກພຣະເຈົ້າ, ແລ້ວເປັນຫຍັງເຈົ້າຈຶ່ງຢ້ານທີ່ຈະລຸກຂຶ້ນ ແລະ ປະຕິເສດມັນ? ມີຈັກຄົນທີ່ສາມາດລຸກຂຶ້ນ ແລະ ເວົ້າເພື່ອເຮົາ? ເຈົ້າຂາດແມ່ນແຕ່ສ່ວນທີ່ໜ້ອຍທີ່ສຸດຂອງຄວາມເຂັ້ມແຂງດ້ານບຸກຄະລິກທີ່ເດັກຊາຍມີ.

ວັດຖຸປະສົງຂອງທຸກສິ່ງທີ່ຖືກຈັດຕຽມໄວ້ໃນປັດຈຸບັນແມ່ນເພື່ອຝຶກຝົນພວກເຈົ້າ ເພື່ອວ່າພວກເຈົ້າອາດຈະເຕີບໃຫຍ່ຂຶ້ນໃນຊີວິດຂອງພວກເຈົ້າ, ເພື່ອເຮັດໃຫ້ວິນຍານຂອງພວກເຈົ້າກະຕືລືລົ້ນ ແລະ ຫຼັກແຫຼມ ແລະ ເພື່ອເປີດດວງຕາຝ່າຍວິນຍານຂອງພວກເຈົ້າ ເພື່ອວ່າພວກເຈົ້າຈະຮັບຮູ້ວ່າສິ່ງໃດມາຈາກພຣະເຈົ້າ. ສິ່ງທີ່ມາຈາກພຣະເຈົ້າເຮັດໃຫ້ເຈົ້າຮັບໃຊ້ດ້ວຍຄວາມສາມາດ ແລະ ພາລະ ແລະ ເພື່ອໃຫ້ໝັ້ນຄົງໃນວິນຍານ. ທຸກສິ່ງທີ່ບໍ່ໄດ້ມາຈາກເຮົາແມ່ນວ່າງເປົ່າ; ພວກມັນບໍ່ໄດ້ໃຫ້ຫຍັງເຈົ້າເລີຍ, ພວກມັນເຮັດໃຫ້ມີຊ່ອງວ່າງໃນວິນຍານຂອງເຈົ້າ ແລະ ເຮັດໃຫ້ເຈົ້າເສຍຄວາມສັດທາຂອງເຈົ້າ ແລະ ວາງໄລຍະຫ່າງລະຫວ່າງເຈົ້າ ແລະ ເຮົາ ແລະ ດັກເຈົ້າໄວ້ໃນໃຈຂອງເຈົ້າເອງ. ຕອນນີ້ ເຈົ້າສາມາດກ້າວຂ້າມທຸກສິ່ງໃນໂລກຄາລະວາດເມື່ອເຈົ້າອາໃສຢູ່ໃນວິນຍານ ແຕ່ການມີຊີວິດຢູ່ໃນຄວາມຄິດຂອງເຈົ້າແມ່ນການຖືກຄອບງຳໂດຍຊາຕານ; ນີ້ແມ່ນທາງຕັນແລ້ວ. ດຽວນີ້ ມັນງ່າຍດາຍຫຼາຍ: ຈົ່ງແນມເບິ່ງເຮົາດ້ວຍໃຈຂອງເຈົ້າ ແລ້ວວິນຍານຂອງເຈົ້າຈະເຂັ້ມແຂງຂຶ້ນທັນທີ. ເຈົ້າຈະມີເສັ້ນທາງສູ່ການປະຕິບັດ ແລະ ເຮົາຈະຊີ້ນຳທຸກບາດກ້າວຂອງເຈົ້າ. ພຣະທຳຂອງເຮົາຈະຖືກເປີດເຜີຍແກ່ເຈົ້າທຸກເວລາ ແລະ ທຸກບ່ອນ. ບໍ່ວ່າຢູ່ໃສ ຫຼື ເມື່ອໃດ ຫຼື ສະພາບແວດລ້ອມເປັນອັນຕະລາຍປານໃດ, ເຮົາຈະເຮັດໃຫ້ເຈົ້າເຫັນຢ່າງຊັດເຈນ ແລະ ໃຈຂອງເຮົາຈະຖືກເປີດເຜີຍແກ່ເຈົ້າ ຖ້າເຈົ້າແນມເບິ່ງເຮົາດ້ວຍໃຈຂອງເຈົ້າ; ໃນລັກສະນະນີ້, ເຈົ້າຈະແລ່ນໄປຕາມເສັ້ນທາງຂ້າງໜ້າ ແລະ ຈະບໍ່ຫຼົງທາງ. ບາງຄົນພະຍາຍາມຮູ້ສຶກເຖິງທາງຂອງພວກເຂົາຈາກພາຍນອກ ແຕ່ບໍ່ເຄີຍເຮັດເຊັ່ນນັ້ນຈາກພາຍໃນວິນຍານຂອງພວກເຂົາ.

ພວກເຂົາບໍ່ສາມາດເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດເປັນປະຈໍາ. ເມື່ອພວກເຂົາສົນທະນາກັບຄົນອື່ນ, ພວກເຂົາຍິ່ງສັບສົນຫຼາຍຂຶ້ນ, ບໍ່ມີເສັ້ນທາງທີ່ຈະເດີນຕາມ ແລະ ບໍ່ຮູ້ວ່າຈະເຮັດແນວໃດ. ຄົນເຫຼົ່ານີ້ບໍ່ຮູ້ວ່າແມ່ນຫຍັງທີ່ເຮັດໃຫ້ພວກເຂົາປ່ວຍ; ພວກເຂົາອາດຈະມີຫຼາຍສິ່ງ ແລະ ເຕັມໄປດ້ວຍຄວາມຮັ່ງມີຢູ່ຂ້າງໃນ ແຕ່ມັນມີປະໂຫຍດຫຍັງແດ່? ເຈົ້າມີເສັ້ນທາງໃຫ້ເດີນຕາມແທ້ບໍ? ເຈົ້າມີແສງເຍືອງທາງ ຫຼື ຄວາມສະຫວ່າງບໍ? ເຈົ້າມີຄວາມເຂົ້າໃຈໃໝ່ໃດໆບໍ? ເຈົ້າມີຄວາມຄືບໜ້າ ຫຼື ເຈົ້າຖົດຖອຍບໍ? ເຈົ້າສາມາດຮັກສາແສງສະຫວ່າງໃໝ່ໄດ້ບໍ? ເຈົ້າບໍ່ມີຄວາມນອບນ້ອມ; ຄວາມນອບນ້ອມທີ່ເຈົ້າມັກເວົ້າເຖິງນັ້ນບໍ່ມີຫຍັງເລີຍ ນອກຈາກເປັນພຽງແຕ່ການເວົ້າ. ເຈົ້າໄດ້ດໍາເນີນຊີວິດທີ່ເຊື່ອຟັງບໍ?

ອຸປະສັກທີ່ເກີດຈາກຄວາມຊອບທໍາຂອງຕົວເອງ, ຄວາມອີ່ມເອມໃຈ, ຄວາມເພິ່ງພໍໃຈໃນຕົວເອງ ແລະ ຄວາມຈອງຫອງນັ້ນໃຫຍ່ຫຼວງພຽງໃດ? ຈະໂທດໃຜເມື່ອເຈົ້າບໍ່ສາມາດເຂົ້າສູ່ຄວາມເປັນຈິງໄດ້? ເຈົ້າຄວນກວດສອບຕົວເຈົ້າເອງຢ່າງຮອບຄອບເພື່ອເບິ່ງວ່າເຈົ້າເປັນຄົນທີ່ຖືກຕ້ອງ ຫຼື ບໍ່. ເປົ້າໝາຍ ແລະ ເຈດຕະນາຂອງເຈົ້າຖືກສ້າງຂຶ້ນຮ່ວມກັບເຮົາໃນໃຈບໍ? ຄໍາເວົ້າ ແລະ ການກະທໍາທັງໝົດຂອງເຈົ້າຖືກເວົ້າ ແລະ ກະທໍາຢູ່ຕໍ່ໜ້າເຮົາບໍ? ເຮົາກວດສອບຄວາມຄິດ ແລະ ແນວຄິດທັງໝົດຂອງເຈົ້າ. ເຈົ້າບໍ່ຮູ້ສຶກຜິດບໍ? ເຈົ້າຕັ້ງໜ້າຜິດໆເພື່ອໃຫ້ຄົນອື່ນເຫັນ ແລະ ເຈົ້າຮັບເອົາອາກາດແຫ່ງຄວາມຊອບທໍາໃນຕົວເອງຢ່າງໃຈເຢັນ; ເຈົ້າເຮັດສິ່ງນີ້ເພື່ອປົກປ້ອງຕົວເອງ. ເຈົ້າເຮັດສິ່ງນີ້ເພື່ອປົກປິດຄວາມຊົ່ວຂອງເຈົ້າ ແລະ ເຈົ້າເຖິງຂັ້ນຄິດຫາວິທີທີ່ຈະຜັກດັນຄວາມຊົ່ວຮ້າຍນັ້ນໃຫ້ແກ່ຄົນອື່ນ. ການທໍລະຍົດຈັ່ງແມ່ນມີຢູ່ໃນໃຈເຈົ້າ! ຈົ່ງຄິດເບິ່ງທຸກສິ່ງທີ່ເຈົ້າໄດ້ເວົ້າ. ບໍ່ແມ່ນເພື່ອຜົນປະໂຫຍດຂອງຕົວເຈົ້າເອງບໍທີ່ເຈົ້າປົກປິດຊາຕານ ແລະ ຕໍ່ມາກໍ່ບັງຄັບປຸ້ນອ້າຍເອື້ອຍນ້ອງຂອງເຈົ້າຈາກການກິນ ແລະ ດື່ມຂອງເຂົາເຈົ້າໂດຍຢ້ານວ່າດວງວິນຍານຂອງເຈົ້າຈະໄດ້ຮັບອັນຕະລາຍແມ່ນບໍ? ແມ່ນຫຍັງທີ່ເຈົ້າຕ້ອງເວົ້າເພື່ອຕົວເອງ? ເຈົ້າຄິດວ່າຄັ້ງຕໍ່ໄປເຈົ້າຈະສາມາດຊົດເຊີຍການກິນ ແລະ ດື່ມທີ່ຊາຕານໄດ້ເອົາໄປເທື່ອນີ້ໄດ້ບໍ? ສະນັ້ນ, ຕອນນີ້ເຈົ້າເຫັນຊັດເຈນແລ້ວ; ນີ້ແມ່ນບາງສິ່ງທີ່ເຈົ້າສາມາດຊົດເຊີຍໄດ້ບໍ? ເຈົ້າສາມາດຊົດເຊີຍເວລາທີ່ເສຍໄປນັ້ນໄດ້ບໍ? ພວກເຈົ້າຕ້ອງໝັ່ນກວດສອບຕົວເອງເພື່ອເບິ່ງວ່າ ເປັນຫຍັງຈຶ່ງບໍ່ມີການກິນ ແລະ ດື່ມເກີດຂຶ້ນໃນການປະຊຸມກັນສອງສາມຄັ້ງທີ່ຜ່ານມາ ແລະ ໃຜເຮັດໃຫ້ເກີດບັນຫານີ້. ເຈົ້າຕ້ອງສົນທະນາເທື່ອລະຄົນຈົນກວ່າມັນຊັດເຈນ. ຖ້າຄົນເຊັ່ນນັ້ນບໍ່ຖືກກໍາຈັດຢ່າງຈິງຈັງ, ອ້າຍເອື້ອຍນ້ອງຂອງເຈົ້າກໍຈະບໍ່ເຂົ້າໃຈ ແລະ ມັນກໍຈະເກີດຂຶ້ນອີກ. ດວງຕາຝ່າຍວິນຍານຂອງເຈົ້າປິດຢູ່; ຫຼາຍຄົນໃນພວກເຈົ້າຕາບອດ! ຍິ່ງໄປກວ່ານັ້ນ, ບັນດາຜູ້ທີ່ເຫັນກໍບໍ່ສົນໃຈມັນ. ພວກເຂົາບໍ່ຢືນຢັດ ແລະ ເວົ້າອອກມາ, ພວກເຂົາກໍຕາບອດເຊັ່ນກັນ. ຄົນທີ່ເຫັນແຕ່ບໍ່ເວົ້າແມ່ນເປັນຄົນປາກກືກ. ຈັ່ງແມ່ນມີຄົນພິການຫຼາຍຄົນຢູ່ທີ່ນີ້.

ບາງຄົນບໍ່ເຂົ້າໃຈວ່າຄວາມຈິງແມ່ນຫຍັງ, ຊີວິດແມ່ນຫຍັງ ແລະ ເສັ້ນທາງແມ່ນຫຍັງ ແລະ ພວກເຂົາບໍ່ເຂົ້າໃຈວິນຍານ. ພວກເຂົາຖືວ່າພຣະທໍາຂອງເຮົາເປັນພຽງແຕ່ສູດ. ນີ້ມັນເຄັ່ງຄັດຫຼາຍເກີນໄປ. ພວກເຂົາບໍ່ເຂົ້າໃຈວ່າແມ່ນຫຍັງຄືຄວາມກະຕັນຍູ ແລະ ການສັນລະເສີນທີ່ແທ້ຈິງ. ບາງຄົນບໍ່ສາມາດເຂົ້າໃຈສິ່ງສໍາຄັນ ແລະ ສິ່ງທີ່ເປັນຫຼັກ; ກົງກັນຂ້າມ, ພວກເຂົາເຂົ້າໃຈພຽງແຕ່ສິ່ງສໍາຮອງເທົ່ານັ້ນ.

ການຂັດຂວາງການຄຸ້ມຄອງຂອງພຣະເຈົ້າໝາຍຄວາມວ່າແນວໃດ? ການຮື້ຖອນການກໍ່ສ້າງຄຣິສຕະຈັກໝາຍຄວາມວ່າແນວໃດ? ການຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດໝາຍຄວາມວ່າແນວໃດ? ແມ່ນຫຍັງຄືລູກນ້ອງຂອງຊາຕານ? ຄວາມຈິງເຫຼົ່ານີ້ຕ້ອງຖືກເຂົ້າໃຈຢ່າງຈະແຈ້ງ ແລະ ບໍ່ພຽງແຕ່ຖືກປົກປິດຢ່າງເລື່ອນລອຍເທົ່ານັ້ນ. ແມ່ນຫຍັງເຮັດໃຫ້ບໍ່ມີການກິນ ແລະ ດື່ມໃນຄັ້ງນີ້? ບາງຄົນຮູ້ສຶກວ່າມື້ນີ້ພວກເຂົາຄວນສັນລະເສີນພຣະເຈົ້າດັງໆ ແຕ່ວ່າພວກເຂົາຄວນສັນລະເສີນພຣະອົງແນວໃດ? ພວກເຂົາຄວນເຮັດເຊັ່ນນັ້ນໂດຍການຮ້ອງບົດເພງສັນເສີນ ແລະ ການຟ້ອນລຳບໍ? ແລ້ວວິທີການອື່ນບໍ່ນັບວ່າເປັນການສັນລະເສີນບໍ? ບາງຄົນມາໃນທີ່ປະຊຸມພ້ອມກັບແນວຄວາມຄິດທີ່ວ່າ ການສັນລະເສີນແບບປິຕິຍິນດີແມ່ນວິທີການສັນລະເສີນພຣະເຈົ້າ. ຄົນມີແນວຄວາມຄິດເຫຼົ່ານີ້ ແລະພວກເຂົາບໍ່ໃສ່ໃຈພາລະກິດຂອງພຣະວິນຍານບໍລິສຸດ; ຜົນຮັບສຸດທ້າຍຂອງສິ່ງນີ້ຄືການຂັດຂວາງຍັງເກີດຂຶ້ນຢູ່. ບໍ່ມີການກິນ ແລະ ດື່ມໃນການປະຊຸມນີ້; ພວກເຈົ້າທຸກຄົນເວົ້າວ່າພວກເຈົ້າຄຳນຶງເຖິງພາລະຂອງພຣະເຈົ້າ ແລະ ຈະປົກປ້ອງປະຈັກພະຍານຂອງຄຣິສຕະຈັກ ເຈົ້າເປັນຄົນເຮັດຕາມຄວາມປະສົງຂອງເຮົາບໍ? ຈົ່ງຖາມຕົວເອງວ່າ: ເຈົ້າແມ່ນຄົນທີ່ໄດ້ສະແດງການພິຈາລະນາຕໍ່ພາລະຂອງພຣະອົງບໍ? ເຈົ້າສາມາດປະຕິບັດຄວາມຊອບທຳເພື່ອພຣະອົງໄດ້ບໍ? ເຈົ້າສາມາດຢືນຂຶ້ນ ແລະ ເວົ້າເພື່ອເຮົາໄດ້ບໍ? ເຈົ້າສາມາດນຳເອົາຄວາມຈິງສູ່ການປະຕິບັດໄດ້ຢ່າງເດັດດ່ຽວບໍ? ເຈົ້າກ້າພໍທີ່ຈະຕໍ່ສູ້ກັບການກະທຳທັງໝົດຂອງຊາຕານບໍ? ເຈົ້າຈະສາມາດແຍກອາລົມຂອງເຈົ້າອອກ ແລະ ເປີດໂປງຊາຕານເພື່ອຄວາມຈິງຂອງເຮົາໄດ້ບໍ? ເຈົ້າສາມາດອະນຸຍາດໃຫ້ເຈດຕະນາຂອງເຮົາຖືກຕື່ມເຕັມໃນຕົວເຈົ້າໄດ້ບໍ? ເຈົ້າໄດ້ມອບຫົວໃຈຂອງເຈົ້າໃນຊ່ວງເວລາທີ່ສຳຄັນທີ່ສຸດບໍ? ເຈົ້າແມ່ນຄົນທີ່ເຮັດຕາມຄວາມປະສົງຂອງເຮົາບໍ? ຈົ່ງຕັ້ງຄຳຖາມເຫຼົ່ານີ້ກັບຕົວເຈົ້າເອງ ແລະ ຄິດເຖິງພວກມັນເລື້ອຍໆ. ຂອງຂວັນຂອງຊາຕານຢູ່ພາຍໃນຕົວເຈົ້າ ແລະ ຕ້ອງໂທດເຈົ້າ ຍ້ອນວ່າເຈົ້າບໍ່ເຂົ້າໃຈຄົນ ແລະ ເຈົ້າລົ້ມເຫຼວໃນການຮັບຮູ້ພິດຂອງຊາຕານ; ເຈົ້າກຳລັງພາຕົວເອງໄປສູ່ຄວາມຕາຍ. ຊາຕານໄດ້ຫຼອກລວງເຈົ້າຢ່າງຖີ່ຖ້ວນຈົນເຖິງຈຸດທີ່ເຈົ້າສັບສົນຢ່າງສິ້ນເຊີງ; ເຈົ້າເມົາເຫຼົ້າແວງແຫ່ງຄວາມສຳສ່ອນ ແລະ ເຈົ້າກໍເຊໄປມາ, ບໍ່ສາມາດຍຶດຖືມຸມມອງທີ່ໜັກແໜ້ນໄດ້ ແລະ ບໍ່ມີເສັ້ນທາງສຳລັບການປະຕິບັດຂອງເຈົ້າ. ເຈົ້າບໍ່ໄດ້ກິນແລະ ດື່ມຢ່າງຖືກຕ້ອງ, ເຈົ້າເຂົ້າຮ່ວມໃນການຕໍ່ສູ້ ແລະ ການຜິດຖຽງກັນທີ່ປ່າເຖື່ອນ, ເຈົ້າບໍ່ຮູ້ຈັກຜິດຖືກ ແລະ ເຈົ້າຕິດຕາມໃຜກໍຕາມທີ່ນຳພາ. ເຈົ້າມີຄວາມຈິງບໍ? ບາງຄົນປົກປ້ອງຕົວເອງ ແລະ ແມ່ນແຕ່ເຂົ້າຮ່ວມໃນການຫຼອກລວງ. ພວກເຂົາສົນທະນາກັບຄົນອື່ນ ແຕ່ນັ້ນພຽງແຕ່ນຳພວກເຂົາໄປສູ່ທາງຕັນ. ແມ່ນຈາກເຮົາບໍທີ່ຄົນເຫຼົ່ານີ້ໄດ້ຮັບຄວາມຕັ້ງໃຈ, ເປົ້າໝາຍ, ແຮງຈູງໃຈ ແລະ ຕົ້ນກຳເນີດຂອງພວກເຂົາ? ເຈົ້າຄິດວ່າເຈົ້າສາມາດຊົດເຊີຍອ້າຍເອື້ອຍນ້ອງຂອງເຈົ້າຕໍ່ຄວາມຈິງທີ່ວ່າການກິນ ແລະດື່ມຂອງພວກເຂົາຖືກເອົາໄປບໍ? ຈົ່ງຊອກຫາສອງສາມຄົນເພື່ອສົນທະນາກັນ ແລະ ຖາມພວກເຂົາ; ປ່ອຍໃຫ້ພວກເຂົາເວົ້າເພື່ອຕົວເອງ: ພວກເຂົາໄດ້ຮັບຫຍັງແດ່? ຫຼື ທ້ອງຂອງພວກເຂົາເຕັມໄປດ້ວຍນ້ຳສົກກະປົກ ແລະ ຂີ້ເຫຍື້ອ ໂດຍປ່ອຍໃຫ້ພວກເຂົາບໍ່ມີເສັ້ນທາງທີ່ຈະປະຕິບັດຕາມບໍ? ນັ້ນຈະບໍ່ຮື້ຖອນຄຣິສຕະຈັກບໍ? ຄວາມຮັກລະຫວ່າງອ້າຍເອື້ອຍນ້ອງຢູ່ໃສ? ເຈົ້າຄົ້ນຄວ້າຢ່າງລັບໆວ່າໃຜຖືກ ແລະ

ໃຜຜິດ ແຕ່ເປັນຫຍັງເຈົ້າຈຶ່ງບໍ່ແບກຮັບພາລະຂອງຄຣິສຕະຈັກ? ປົກກະຕິແລ້ວ, ເຈົ້າເກັ່ງໃນການຮ້ອງປະໂຫຍກທີ່ໂດດເດັ່ນອອກມາ ແຕ່ເມື່ອສິ່ງຕ່າງໆເກີດຂຶ້ນແທ້ໆ, ເຈົ້າກັບບໍ່ແນ່ໃຈກ່ຽວກັບມັນ. ບາງຄົນເຂົ້າໃຈ ແຕ່ພຽງແຕ່ຈົ່ມຄ່ອຍໆເທົ່ານັ້ນ ໃນຂະນະທີ່ຄົນອື່ນເວົ້າສິ່ງທີ່ພວກເຂົາເຂົ້າໃຈອອກມາ ແຕ່ບໍ່ມີໃຜເວົ້າຫຍັງອີກແລ້ວ. ພວກເຂົາບໍ່ຮູ້ວ່າສິ່ງໃດມາຈາກພຣະເຈົ້າ ແລະ ສິ່ງໃດແມ່ນພາລະກິດຂອງຊາຕານ. ຄວາມຮູ້ສຶກພາຍໃນກ່ຽວກັບຊີວິດຂອງພວກເຈົ້າຢູ່ໃສ? ເຈົ້າພຽງແຕ່ບໍ່ສາມາດເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຈົ້າກໍບໍ່ສາມາດຮັບຮູ້ມັນ ແລະ ເຈົ້າມີຊ່ວງເວລາທີ່ຫຍຸ້ງຍາກໃນການຍອມຮັບສິ່ງໃໝ່ໆ. ເຈົ້າພຽງແຕ່ຍອມຮັບສິ່ງຕ່າງໆທາງສາສະໜາ ແລະ ທາງໂລກທີ່ສອດຄ່ອງກັບແນວຄວາມຄິດຂອງຄົນເທົ່ານັ້ນ. ຜົນທີ່ໄດ້ຄື ເຈົ້າຕໍ່ສູ້ແບບບໍ່ມີເຫດຜົນ. ມີຈັກຄົນທີ່ສາມາດເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດໄດ້? ມີຈັກຄົນທີ່ແບກພາລະຂອງຄຣິສຕະຈັກໄດ້ຢ່າງແທ້ຈິງ? ເຈົ້າເຂົ້າໃຈມັນບໍ? ການຮ້ອງເພງສັນລະເສີນແມ່ນວິທີການໜຶ່ງໃນການສັນລະເສີນພຣະເຈົ້າ ແຕ່ວ່າເຈົ້າບໍ່ເຂົ້າໃຈຄວາມຈິງຂອງການສັນລະເສີນພຣະເຈົ້າຢ່າງແຈ່ມແຈ້ງ. ຍິ່ງໄປກວ່ານັ້ນ, ເຈົ້າເຄັ່ງຄັດໃນວິທີທີ່ເຈົ້າໄປສັນລະເສີນພຣະອົງ. ນັ້ນບໍ່ແມ່ນແນວຄວາມຄິດທີ່ເຈົ້າມີບໍ? ເຈົ້າຍຶດຕິດກັບແນວຄວາມຄິດຂອງຕົວເຈົ້າເອງຢ່າງບໍ່ລົດລະຢູ່ສະເໝີ ແລະ ເຈົ້າບໍ່ສາມາດສຸມໃສ່ສິ່ງທີ່ພຣະວິນຍານບໍລິສຸດຈະກະທຳໃນວັນນີ້, ບໍ່ສາມາດຮູ້ສຶກສິ່ງທີ່ອ້າຍເອື້ອຍນ້ອງຂອງເຈົ້າກຳລັງຮູ້ສຶກຢູ່ ແລະ ບໍ່ສາມາດສະແຫວງຫາຄວາມປະສົງຂອງພຣະເຈົ້າແບບງຽບໆ. ເຈົ້າເຮັດສິ່ງຕ່າງໆແບບສຸ່ມສີ່ສຸ່ມຫ້າ; ເຈົ້າອາດຈະຮ້ອງເພງໄດ້ດີ ແຕ່ຜົນທີ່ໄດ້ແມ່ນຄວາມຫຍຸ້ງເຫຍີງຢ່າງສົມບູນ. ນັ້ນແມ່ນການກິນ ແລະ ດື່ມແທ້ບໍ? ເຈົ້າເຫັນບໍວ່າແທ້ຈິງແລ້ວແມ່ນໃຜເປັນຜູ້ກໍ່ໃຫ້ເກີດການຂັດຂວາງ? ເຈົ້າບໍ່ໄດ້ອາໄສຢູ່ໃນວິນຍານຢ່າງແນ່ນອນ; ກົງກັນຂ້າມ, ເຈົ້າຍຶດໝັ້ນໃນແນວຄວາມຄິດຕ່າງໆ. ຈະມີວິທີແບກຮັບພາລະເພື່ອຄຣິສຕະຈັກແນວໃດ? ພວກເຈົ້າຕ້ອງເຫັນວ່າ ຕອນນີ້ພາລະກິດຂອງພຣະວິນຍານບໍລິສຸດກຳລັງຄືບໜ້າໄວຍິ່ງຂຶ້ນ. ເພາະສະນັ້ນ, ບໍ່ແມ່ນເຈົ້າຕາບອດບໍຖ້າເຈົ້າກຳລັງກຳແໜ້ນແນວຄວາມຄິດຂອງຕົວເຈົ້າເອງ ແລະ ຕໍ່ຕ້ານພາລະກິດຂອງພຣະວິນຍານບໍລິສຸດຢູ່? ນັ້ນບໍ່ຄ້າຍຄືກັບການທີ່ແມງວັນບິນເຂົ້າຕຳກຳແພງ ແລະ ໂຊເຊໄປມາບໍ? ຖ້າເຈົ້າຍັງຢູ່ໃນລັກສະນະນີ້, ເຈົ້າຈະຖືກປະຖິ້ມ.

ບັນດາຜູ້ທີ່ຖືກເຮັດໃຫ້ສົມບູນກ່ອນທີ່ໄພພິບັດຈະຍອມແພ້ຕໍ່ພຣະເຈົ້າ. ພວກເຂົາດຳລົງຊີວິດໂດຍການເພິ່ງພາພຣະຄຣິດ, ພວກເຂົາເປັນພະຍານໃຫ້ພຣະອົງ ແລະ ພວກເຂົາເຊີດຊູພຣະອົງ. ພວກເຂົາແມ່ນເດັກຊາຍທີ່ໄດ້ຮັບໄຊຊະນະ ແລະ ເປັນທະຫານທີ່ດີຂອງພຣະຄຣິດ. ມັນສຳຄັນທີ່ຕອນນີ້ເຈົ້າຕ້ອງສະຫງົບຈິດໃຈ, ເຂົ້າໃກ້ພຣະເຈົ້າ ແລະ ສົນທະນາກັບພຣະອົງ. ຖ້າເຈົ້າບໍ່ສາມາດເຂົ້າໃກ້ພຣະເຈົ້າ, ເຈົ້າກໍສ່ຽງທີ່ຈະຖືກຊາຕານຈັບຕົວໄປ. ຖ້າເຈົ້າສາມາດເຂົ້າໃກ້ເຮົາ ແລະ ສົນທະນາກັບເຮົາ, ແລ້ວຄວາມຈິງທັງໝົດກໍຈະຖືກເປີດເຜີຍແກ່ເຈົ້າ ແລະ ເຈົ້າກໍຈະມີມາດຕະຖານໃນການດຳລົງຊີວິດ ແລະ ປະຕິບັດ. ຍ້ອນເຈົ້າແມ່ນຜູ້ໜຶ່ງທີ່ໃກ້ຊິດກັບເຮົາ, ພຣະທຳຂອງເຮົາຈະບໍ່ຢູ່ຫ່າງຈາກເຈົ້າ ແລະ ເຈົ້າຈະບໍ່ຫຼົງທາງຈາກພຣະທຳຂອງເຮົາຕະຫຼອດຊີວິດຂອງເຈົ້າ; ຊາຕານຈະບໍ່ມີທາງເອົາປຽບເຈົ້າໄດ້ ແລະ ໃນທາງກົງກັນຂ້າມ ມັນຈະອັບອາຍ ແລະ ໜີໄປດ້ວຍຄວາມປາໄຊ. ຖ້າເຈົ້າເບິ່ງແຕ່ພາຍນອກຫາສິ່ງທີ່

ຂາດຫາຍໄປໃນຕົວເຈົ້າ, ບາງຄັ້ງເຈົ້າອາດຈະພົບມັນບາງສ່ວນ ແຕ່ສິ່ງທີ່ເຈົ້າພົບສ່ວນຫຼາຍຈະເປັນກົດລະບຽບ ແລະ ສິ່ງຕ່າງໆທີ່ເຈົ້າບໍ່ຕ້ອງການ. ເຈົ້າຕ້ອງປ່ອຍວາງຕົວເອງ, ກິນ ແລະ ດື່ມພຣະທຳຂອງເຮົາຫຼາຍຂຶ້ນ ແລະ ຮູ້ວິທີທີ່ຈະໄຕ່ຕອງພວກມັນ. ຖ້າເຈົ້າບໍ່ເຂົ້າໃຈຫຍັງບາງຢ່າງ, ຈົ່ງເຂົ້າມາໃກ້ເຮົາ ແລະ ສົນທະນາກັບເຮົາເລື້ອຍໆ; ດ້ວຍວິທີນີ້, ສິ່ງຕ່າງໆທີ່ເຈົ້າເຂົ້າໃຈຈະເປັນຈິງ ແລະ ຈິງແທ້. ເຈົ້າຕ້ອງເລີ່ມຕົ້ນດ້ວຍການເຂົ້າໃກ້ເຮົາ. ສິ່ງນີ້ສຳຄັນ! ບໍ່ດັ່ງນັ້ນ, ເຈົ້າຈະບໍ່ຮູ້ວິທີກິນ ແລະ ດື່ມ. ເຈົ້າບໍ່ສາມາດກິນ ແລະ ດື່ມດ້ວຍຕົວເຈົ້າເອງໄດ້; ວຸດທິພາວະຂອງເຈົ້ານັ້ນນ້ອຍເກີນໄປອີຫຼີ.

# ບົດທີ 14

ຕອນນີ້, ເວລາກຳລັງເລັ່ງດ່ວນແທ້ໆ. ພຣະວິນຍານບໍລິສຸດໃຊ້ຫຼາຍວິທີການທີ່ແຕກຕ່າງກັນເພື່ອນຳພາພວກເຮົາສູ່ພຣະທຳຂອງພຣະເຈົ້າ. ເຈົ້າຄວນປະກອບດ້ວຍຄວາມຈິງທັງໝົດ, ຖືກເຮັດໃຫ້ບໍລິສຸດ ແລະ ຢູ່ໃກ້ກັບເຮົາແທ້ໆ ແລະ ມີການຄົບຫາສະມາຄົມກັບເຮົາ ແລະ ເຈົ້າຈະບໍ່ໄດ້ຮັບອະນຸຍາດໃຫ້ມີບ່ອນວ່າງເພື່ອຄັດ ແລະ ເລືອກເອົາ. ພາລະກິດຂອງພຣະວິນຍານບໍລິສຸດປາສະຈາກອາລົມ ແລະ ບໍ່ສົນວ່າເຈົ້າເປັນຄົນແບບໃດ. ຕາບໃດທີ່ເຈົ້າເຕັມໃຈຄົ້ນຫາ ແລະ ຕິດຕາມ, ບໍ່ແກ້ຕົວ ແລະ ບໍ່ໂຕ້ຖຽງກ່ຽວກັບຜົນກຳໄລ ແລະ ການຂາດທຶນຂອງຕົວເຈົ້າເອງ, ແຕ່ຄົ້ນຫາດ້ວຍຄວາມຫິວ ແລະ ຄວາມກະຫາຍຫາຄວາມຊອບທຳ, ແລ້ວເຮົາຈະສ່ອງສະຫວ່າງໃຫ້ກັບເຈົ້າ. ບໍ່ວ່າເຈົ້າຈະເປັນຄົນໂງ່ຈ້າ ແລະ ບໍ່ຮູ້ປານໃດກໍຕາມ, ເຮົາບໍ່ໄດ້ແນໃສ່ສິ່ງເຫຼົ່ານີ້. ເຮົາຢາກເຫັນວ່າເຈົ້າເຮັດວຽກໜັກພຽງໃດໃນດ້ານບວກ. ຖ້າເຈົ້າຍັງຍຶດໝັ້ນໃນແນວຄິດຂອງຕົວເອງ, ໝູນເປັນວົງກົມໃນໂລກນ້ອຍໆຂອງຕົວເຈົ້າເອງ, ແລ້ວເຮົາກໍຄິດວ່າເຈົ້າຢູ່ໃນອັນຕະລາຍ... ການຖືກຍົກຂຶ້ນແມ່ນຫຍັງ? ການຖືກປະຖິ້ມໝາຍຄວາມວ່າແນວໃດ? ມື້ນີ້ ເຈົ້າຄວນມີຊີວິດຢູ່ຕໍ່ໜ້າພຣະເຈົ້າແນວໃດ? ເຈົ້າຄວນຮ່ວມມືກັບເຮົາຢ່າງຫ້າວຫັນແນວໃດ? ຈົ່ງປະຖິ້ມແນວຄິດຂອງເຈົ້າເອງ, ວິເຄາະຕົວເຈົ້າເອງຢ່າງລະອຽດ, ຖອດໜ້າກາກຂອງເຈົ້າອອກ, ເຫັນທາດແທ້ຂອງຕົວເຈົ້າເອງຢ່າງຊັດເຈນ, ກຽດຊັງຕົວເອງ, ມີຫົວໃຈທີ່ສະແຫວງຫາຄວາມຊອບທຳຢ່າງຫິວ ແລະ ກະຫາຍ, ເຊື່ອວ່າຕົວເຈົ້າເອງນັ້ນບໍ່ມີຄ່າຫຍັງເລີຍ, ເຕັມໃຈທີ່ຈະສະຫຼະຕົວເອງ, ສາມາດຢຸດທຸກວິທີການເຮັດສິ່ງຕ່າງໆຂອງເຈົ້າ, ເຮັດໃຫ້ຕົນເອງສະຫງົບງຽບຢູ່ຕໍ່ໜ້າເຮົາ, ຖວາຍຄຳອະທິຖານຫຼາຍຂຶ້ນ, ເພິ່ງພາເຮົາຢ່າງເອົາຈິງເອົາຈັງ, ເງີຍໜ້າຂຶ້ນຫາເຮົາ ແລະ ບໍ່ຢຸດເຊົາທີ່ຈະເຂົ້າໃກ້ເຮົາ ແລະ ສື່ສານກັບເຮົາ, ໃນສິ່ງເຫຼົ່ານີ້ ກະແຈໄດ້ຖືກຄົ້ນພົບ. ຜູ້ຄົນມັກຢູ່ໃນຕົວເອງ ແລະ ດັ່ງນັ້ນຈຶ່ງບໍ່ໄດ້ຢູ່ຕໍ່ໜ້າພຣະເຈົ້າ.

ພາລະກິດປັດຈຸບັນຂອງພຣະວິນຍານບໍລິສຸດນັ້ນຍາກແທ້ໆທີ່ຄົນຈະຈິນຕະນາການໄດ້ ແລະ ທຸກຄົນເຂົ້າສູ່ຄວາມເປັນຈິງ; ມັນຈະບໍ່ເປັນຜົນແທ້ໆທີ່ຈະບໍ່ຄິດກ່ຽວກັບມັນ. ຖ້າຫົວໃຈ ແລະ ຈິດໃຈຂອງເຈົ້າຢູ່ຜິດບ່ອນ, ແລ້ວເຈົ້າກໍຈະບໍ່ມີທາງກ້າວໄປຂ້າງໜ້າ. ແຕ່ຕົ້ນຈົນຈົບ, ເຈົ້າຕ້ອງລະວັງຢູ່ຕະຫຼອດເວລາ ແລະ ໃຫ້ແນ່ໃຈວ່າຈະລະມັດລະວັງຕໍ່ຄວາມປະໝາດ. ພອນຈຶ່ງມີແກ່ຜູ້ທີ່ລະວັງ ແລະ ຄອຍຖ້າຢູ່ສະເໝີ ແລະ ຜູ້ທີ່ສະຫງົບງຽບຕໍ່ໜ້າເຮົາ! ພອນຈຶ່ງມີແກ່ຜູ້ທີ່ແນມຂຶ້ນຫາເຮົາຢູ່ໃນໃຈຂອງພວກເຂົາຢູ່ສະເໝີ, ຜູ້ທີ່ເອົາໃຈໃສ່ຟັງສຽງຂອງເຮົາຢ່າງໃກ້ຊິດ, ຜູ້ທີ່ໃສ່ໃຈການກະທຳຂອງເຮົາ ແລະ ຜູ້ທີ່ນຳເອົາພຣະທຳຂອງເຮົາໄປປະຕິບັດ! ເວລາສາມາດຜ່ານພົ້ນໄປໂດຍບໍ່ຊັກຊ້າອີກຕໍ່ໄປແທ້ໆ; ໄພພິບັດທຸກຮູບແບບຈະແຜ່ລາມໄປ, ອ້າປາກທີ່ໂຫດຮ້າຍ ແລະ ກະຫາຍເລືອດຂອງພວກມັນເພື່ອກືນກິນພວກເຈົ້າທຸກຄົນຄືກັບນໍ້າຖ້ວມ. ລູກຊາຍຂອງເຮົາເອີຍ! ຮອດເວລາແລ້ວ! ບໍ່ມີບ່ອນໃຫ້ໄຕ່ຕອງອີກຕໍ່ໄປ. ທາງອອກດຽວທີ່ຈະນຳເຈົ້າມາຢູ່ພາຍໃຕ້ການປົກປ້ອງຂອງເຮົາຄືຕ້ອງກັບຄືນມາຢູ່ຕໍ່ໜ້າເຮົາ. ເຈົ້າຕ້ອງມີບຸກຄະລິກທີ່ແຂງແຮງຂອງເດັກຊາຍ; ຢ່າອ່ອນແອ ຫຼື ທໍ້ໃຈ. ເຈົ້າຕ້ອງນຳບາດກ້າວຂອງເຮົາໃຫ້ທັນ, ບໍ່

ປະຕິເສດແສງສະຫວ່າງໃໝ່ ແລະ ດັ່ງທີ່ເຮົາບອກວິທີກິນ ແລະ ດື່ມພຣະທຳຂອງເຮົາໃຫ້ແກ່ພວກເຈົ້າ, ພວກເຈົ້າຄວນຍອມ ແລະ ກິນ ແລະ ດື່ມພວກມັນຢ່າງຖືກຕ້ອງ. ຍັງມີເວລາທີ່ຈະຕໍ່ສູ້ ຫຼື ໂຕ້ແຍ້ງກັນຕາມອຳເພີໃຈບໍ? ເຈົ້າສາມາດເຮັດສິ່ງຄາມໄດ້ບໍ ຖ້າເຈົ້າບໍ່ໄດ້ກິນຈົນອີ່ມ ແລະ ບໍ່ພຽບພ້ອມດ້ວຍຄວາມຈິງຢ່າງສົມບູນ? ຖ້າເຈົ້າຕ້ອງການເອົາຊະນະສາສະໜາ, ເຈົ້າຕ້ອງພຽບພ້ອມດ້ວຍຄວາມຈິງ. ຈົ່ງກິນ ແລະ ດື່ມພຣະທຳຂອງເຮົາຫຼາຍຂຶ້ນ ແລະ ໄຕ່ຕອງພວກມັນຕໍ່ໄປ. ເຈົ້າຕ້ອງກິນ ແລະ ດື່ມພຣະທຳຂອງເຮົາຢ່າງເປັນອິດສະຫຼະ ແລະ ເລີ່ມຕົ້ນດ້ວຍການຫຍັບເຂົ້າໃກ້ພຣະເຈົ້າ. ໃຫ້ສິ່ງນີ້ເປັນຄຳເຕືອນໃຫ້ແກ່ເຈົ້າ! ເຈົ້າຕ້ອງເອົາໃຈໃສ່! ຜູ້ທີ່ສະຫຼາດຄວນຕື່ນຂຶ້ນມາສູ່ຄວາມຈິງໂດຍໄວ! ປະຖິ້ມສິ່ງໃດກໍຕາມທີ່ເຈົ້າບໍ່ເຕັມໃຈອອກຈາກ. ເຮົາຂໍບອກເຈົ້າອີກຄັ້ງໜຶ່ງວ່າສິ່ງດັ່ງກ່າວນັ້ນຊ່າງເປັນອັນຕະລາຍຕໍ່ຊີວິດຂອງເຈົ້າແທ້ໆ ແລະ ພວກມັນບໍ່ມີປະໂຫຍດຫຍັງເລີຍ! ເຮົາຫວັງວ່າເຈົ້າຈະເພິ່ງພາເຮົາໃນການກະທຳຂອງເຈົ້າ; ບໍ່ດັ່ງນັ້ນ, ເສັ້ນທາງດຽວໃນຕໍ່ໜ້າແມ່ນເສັ້ນທາງແຫ່ງຄວາມຕາຍ, ແລ້ວເຈົ້າຈະໄປສະແຫວງຫາເສັ້ນທາງແຫ່ງຊີວິດຢູ່ໃສ? ຈົ່ງຖອນຫົວໃຈຂອງເຈົ້າທີ່ມັກເຮັດໃຫ້ຕົວເອງຫຍຸ້ງກັບສິ່ງຕ່າງໆພາຍນອກນັ້ນອອກເສຍ! ຈົ່ງຖອນຫົວໃຈຂອງເຈົ້າທີ່ບໍ່ເຊື່ອຟັງຄົນອື່ນນັ້ນອອກເສຍ! ຖ້າຊີວິດຂອງເຈົ້າບໍ່ສາມາດເຕີບໃຫຍ່ ແລະ ຖ້າເຈົ້າຖືກປະຖິ້ມ, ແລ້ວເຈົ້າຈະບໍ່ເປັນຄົນທີ່ເຮັດໃຫ້ຕົວເຈົ້າເອງສະດຸດບໍ? ພາລະກິດໃນປັດຈຸບັນຂອງພຣະວິນຍານບໍລິສຸດບໍ່ແມ່ນສິ່ງທີ່ເຈົ້າຈິນຕະນາການ. ຖ້າເຈົ້າບໍ່ສາມາດປະຖິ້ມແນວຄິດຂອງເຈົ້າ, ແລ້ວເຈົ້າກໍຈະປະສົບກັບການສູນເສຍອັນຍິ່ງໃຫຍ່. ຖ້າພາລະກິດນັ້ນສອດຄ່ອງກັບແນວຄິດຂອງມະນຸດ, ທຳມະຊາດ ແລະ ແນວຄິດເກົ່າໆຂອງເຈົ້າຈະສາມາດປາກົດແຈ້ງໄດ້ບໍ? ເຈົ້າຈະສາມາດຮູ້ຈັກຕົວເຈົ້າເອງໄດ້ບໍ? ບາງທີເຈົ້າຍັງຄິດວ່າເຈົ້າບໍ່ມີແນວຄິດ, ແຕ່ຄັ້ງນີ້ ດ້ານທີ່ໜ້າກຽດຊັງຕ່າງໆທັງໝົດຂອງເຈົ້າຈະປາກົດຂຶ້ນຢ່າງຊັດເຈນ. ຈົ່ງຖາມຕົວເຈົ້າເອງຢ່າງລະມັດລະວັງວ່າ:

ເຈົ້າແມ່ນຜູ້ທີ່ຍອມເຮົາບໍ?

ເຈົ້າເຕັມໃຈ ແລະ ພ້ອມທີ່ຈະສະຫຼະຕົວເອງ ແລະ ຕິດຕາມເຮົາບໍ?

ເຈົ້າແມ່ນຜູ້ທີ່ສະແຫວງຫາໃບໜ້າຂອງເຮົາດ້ວຍໃຈທີ່ບໍລິສຸດບໍ?

ເຈົ້າຮູ້ວິທີຫຍັບເຂົ້າໃກ້ເຮົາ ແລະ ສື່ສານກັບເຮົາບໍ?

ເຈົ້າສາມາດສະຫງົບຕົວເອງຢູ່ຕໍ່ໜ້າເຮົາ ແລະ ສະແຫວງຫາຄວາມປະສົງຂອງເຮົາບໍ?

ເຈົ້ານຳພຣະທຳທີ່ເຮົາເປີດເຜີຍແກ່ເຈົ້ານັ້ນໄປປະຕິບັດບໍ?

ເຈົ້າສາມາດຮັກສາສະພາບປົກກະຕິຕໍ່ໜ້າເຮົາໄດ້ບໍ?

ເຈົ້າສາມາດເບິ່ງເຫັນກົນອຸບາຍອັນມີເລ່ຫຼ່ຽມຂອງຊາຕານໄດ້ບໍ? ເຈົ້າກ້າທີ່ປະເປີດໂປງພວກມັນບໍ?

ເຈົ້າຄຳນຶງເຖິງພາລະຂອງເຮົາແນວໃດ?

ເຈົ້າແມ່ນຄົນໜຶ່ງທີ່ຄຳນຶງເຖິງພາລະຂອງພຣະເຈົ້າບໍ?

ເຈົ້າເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດແນວໃດ?

ເຈົ້າຮັບໃຊ້ໃນການປະສານງານໃນຄອບຄົວຂອງພຣະເຈົ້າແນວໃດ?

ເຈົ້າເປັນພະຍານທີ່ໜັກແໜ້ນໃຫ້ແກ່ເຮົາແນວໃດ?

ເຈົ້າຈະຕໍ່ສູ້ຢ່າງດີເພື່ອຄວາມຈິງໄດ້ແນວໃດ?

ເຈົ້າຕ້ອງໃຊ້ເວລາເພື່ອໄຕ່ຕອງຄວາມຈິງເຫຼົ່ານີ້ຢ່າງຖີ່ຖ້ວນ. ຂໍ້ເທັດຈິງແມ່ນພຽງພໍທີ່ຈະພິສູດວ່າວັນນັ້ນໃກ້ເຂົ້າມາແລ້ວຢ່າງຍິ່ງ. ເຈົ້າຕ້ອງຖືກເຮັດໃຫ້ສົມບູນກ່ອນທີ່ໄພພິບັດຈະມາເຖິງ, ນີ້ແມ່ນເລື່ອງສຳຄັນ, ເປັນເລື່ອງເລັ່ງດ່ວນຫຼາຍທີ່ຕ້ອງຖືກແກ້ໄຂ! ເຮົາປາຖະໜາທີ່ຈະເຮັດໃຫ້ພວກເຈົ້າສົມບູນ, ແຕ່ເຮົາເຫັນວ່າພວກເຈົ້າຂ້ອນຂ້າງດື້ດ້ານແທ້ໆ. ເຈົ້າມີຄວາມກ້າຫານ ແຕ່ເຈົ້າບໍ່ໄດ້ໃຊ້ມັນໃຫ້ເປັນປະໂຫຍດທີ່ສຸດ ແລະ ເຈົ້າບໍ່ໄດ້ເຂົ້າໃຈສິ່ງທີ່ສຳຄັນທີ່ສຸດ; ກົງກັນຂ້າມ, ສິ່ງທີ່ເຈົ້າເຂົ້າໃຈທັງໝົດກັບເປັນເລື່ອງເລັກໆນ້ອຍໆ. ມີປະໂຫຍດຫຍັງໃນການຕຶກຕອງສິ່ງເຫຼົ່ານີ້? ມັນບໍ່ແມ່ນການເສຍເວລາບໍ? ເຮົາສະແດງຄວາມກະລຸນາໃຫ້ແກ່ພວກເຈົ້າໃນລັກສະນະນີ້ ແຕ່ພວກເຈົ້າບໍ່ໄດ້ສະແດງຄວາມຂອບໃຈໃດໆເລີຍ; ພວກເຈົ້າພຽງແຕ່ຕໍ່ສູ້ກັນເອງ, ດັ່ງນັ້ນ ຄວາມພະຍາຍາມອັນພາກພຽນທັງໝົດຂອງເຮົາບໍ່ໄດ້ສູນເປົ່າບໍ? ຖ້າພວກເຈົ້າສືບຕໍ່ໃນລັກສະນະນີ້, ເຮົາຈະບໍ່ໃຊ້ເວລາຊັກຊວນພວກເຈົ້າຕໍ່ໄປ! ເຮົາກ່າວກັບພວກເຈົ້າວ່າ, ພາລະກິດຂອງພຣະວິນຍານບໍລິສຸດຈະຖືກຖອນອອກຈາກພວກເຈົ້າ, ເວັ້ນແຕ່ພວກເຈົ້າຈະຕື່ນຂຶ້ນສູ່ຄວາມຈິງ! ພວກເຈົ້າຈະບໍ່ໄດ້ຮັບຫຍັງກິນອີກ ແລະ ພວກເຈົ້າອາດເຊື່ອດັ່ງທີ່ພວກເຈົ້າເຫັນວ່າສົມຄວນ. ເຮົາໄດ້ກ່າວພຣະທຳຂອງເຮົາຢ່າງລະອຽດຖີ່ຖ້ວນ; ມັນຂຶ້ນຢູ່ກັບພວກເຈົ້າວ່າພວກເຈົ້າຈະຟັງ ຫຼື ບໍ່. ເມື່ອຮອດເວລາທີ່ພວກເຈົ້າສັບສົນ, ບໍ່ມີທາງໃນຕໍ່ໜ້າ ແລະ ບໍ່ສາມາດເຫັນຄວາມສະຫວ່າງແທ້, ພວກເຈົ້າຈະບໍ່ໂທດເຮົາບໍ? ຊ່າງໂງ່ແທ້! ຜົນທີ່ຕາມມາຈະເປັນແນວໃດ ຖ້າເຈົ້າຍຶດຕິດກັບຕົວເອງຢ່າງໜັກແໜ້ນ, ຖ້າເຈົ້າປະຕິເສດທີ່ຈະປ່ອຍວາງ? ພາລະກິດຂອງເຈົ້າຈະບໍ່ເປັນພຽງການປະຕິບັດທີ່ໄຮ້ປະໂຫຍດບໍ? ຊ່າງໜ້າເວດທະນາທີ່ຕ້ອງຖືກປະຖິ້ມເມື່ອໄພພິບັດເກີດຂຶ້ນ!

ປັດຈຸບັນນີ້ແມ່ນໄລຍະທີ່ສຳຄັນຂອງການສ້າງຄຣິສຕະຈັກ. ຖ້າເຈົ້າບໍ່ສາມາດຮ່ວມມືກັບເຮົາຢ່າງຫ້າວຫັນ ແລະ ມອບຖວາຍຕົວເຈົ້າເອງໃຫ້ແກ່ເຮົາຢ່າງສຸດຈິດສຸດໃຈ ແລະ ຖ້າເຈົ້າບໍ່ສາມາດປະຖິ້ມທຸກສິ່ງ, ແລ້ວເຈົ້າກໍຈະປະສົບກັບຄວາມສູນເສຍ. ເຈົ້າຍັງສາມາດປົດບັງເຈດຕະນາອື່ນໆໄດ້ອີກບໍ? ເຮົາສະແດງຄວາມຜ່ອນຜັນໃຫ້ແກ່ພວກເຈົ້າໃນລັກສະນະນີ້, ຄອຍຖ້າໃຫ້ພວກເຈົ້າກັບໃຈ ແລະ ເລີ່ມຕົ້ນໃໝ່. ແນວໃດກໍຕາມ, ເວລາບໍ່ອະນຸຍາດເລື່ອງນີ້ອີກຕໍ່ໄປ ແລະ ເຮົາຕ້ອງພິຈາລະນາເບິ່ງພາບລວມ. ຍ້ອນເຫັນແກ່ຈຸດປະສົງແຫ່ງແຜນການຄຸ້ມຄອງຂອງພຣະເຈົ້າ, ທຸກສິ່ງກ້າວໄປຂ້າງໜ້າ ແລະ ຂັ້ນຕອນຂອງເຮົາເດີນໄປຂ້າງໜ້າໃນແຕ່ລະວັນ, ແຕ່ລະຊົ່ວໂມງ ແລະ ແຕ່ລະຊ່ວງເວລາ, ຜູ້ທີ່ບໍ່ສາມາດນຳທັນຈະຖືກປະຖິ້ມ. ທຸກໆວັນມີແສງສະຫວ່າງໃໝ່; ທຸກໆວັນມີການກະທຳໃໝ່ໆໄດ້ເກີດຂຶ້ນ. ທຸກໆວັນມີສິ່ງໃໝ່ໆເກີດຂຶ້ນ ແລະ ບັນດາຜູ້ທີ່ບໍ່ສາມາດເຫັນແສງສະຫວ່າງໄດ້ກໍເປັນຄົນຕາບອດ! ຜູ້ທີ່ບໍ່ຕິດຕາມຈະຖືກກຳຈັດ...

# ບົດທີ 15

ການປາກົດຕົວຂອງພຣະເຈົ້າໄດ້ເກີດຂຶ້ນໃນທຸກຄຣິສຕະຈັກ. ແມ່ນພຣະວິນຍານທີ່ກ່າວອອກ; ພຣະອົງແມ່ນໄຟທີ່ລຸກລາມ, ມີຄວາມສະຫງ່າຜ່າເຜີຍ ແລະ ກຳລັງພິພາກສາ. ພຣະອົງເປັນບຸດມະນຸດ, ນຸ່ງເສື້ອຜ້າທີ່ລ່າມລົງຈົນຮອດຕີນຂອງພຣະອົງ ແລະ ມີສາຍແອວຄຳອ້ອມເອິກຂອງພຣະອົງ. ຫົວ ແລະ ຜົມຂອງພຣະອົງຂາວຄືຂົນແກະ ແລະ ຕາຂອງພຣະອົງກໍລຸກໄໝ້ຄືກັບແປວໄຟ; ຕີນຂອງພຣະອົງຄ້າຍຄືກັບທອງເຫຼືອງກ້ຽງ, ຄືກັບວ່າທີ່ຖືກເຮັດໃຫ້ບໍລິສຸດໃນເຕົາໄຟ ແລະ ສຽງຂອງພຣະອົງກໍຄືກັບສຽງນໍ້າຫຼາຍແຫ່ງ. ໃນມືກໍ້າຂວາຂອງພຣະອົງແມ່ນຖືດາວເຈັດດວງ ແລະ ໃນປາກຂອງພຣະອົງແມ່ນມີດາບສອງຄົມ ແລະ ໃບໜ້າຂອງພຣະອົງສ່ອງແສງຢ່າງປະກາຍຄືກັບດວງຕາເວັນທີ່ເຜົາໄໝ້!

ບຸດມະນຸດໄດ້ຖືກເປັນພະຍານ ແລະ ພຣະເຈົ້າເອງໄດ້ຖືກເປີດເຜີຍອອກ. ສະຫງ່າລາສີຂອງພຣະເຈົ້າໄດ້ສະແດງອອກ, ສ່ອງແສງຢ່າງປະກາຍຄືກັບດວງຕາເວັນທີ່ກຳລັງເຜົາໄໝ້! ໃບໜ້າທີ່ມີສະຫງ່າລາສີຂອງພຣະອົງສ່ອງແສງຈ້າດ້ວຍແສງແວວວາວ; ສາຍຕາຂອງຜູ້ໃດກ້າປະຕິບັດຕໍ່ພຣະອົງດ້ວຍການຕໍ່ຕ້ານ? ການຕໍ່ຕ້ານນຳໄປສູ່ຄວາມຕາຍ! ບໍ່ມີຄວາມເມດຕາແມ່ນແຕ່ໜ້ອຍດຽວສຳລັບສິ່ງໃດໜຶ່ງທີ່ເຈົ້າຄິດຢູ່ໃນຫົວໃຈ, ຄຳເວົ້າໃດໜຶ່ງທີ່ເຈົ້າກ່າວ ຫຼື ສິ່ງໃດໜຶ່ງທີ່ເຈົ້າເຮັດ. ພວກເຈົ້າທຸກຄົນຈະໄດ້ມາເຂົ້າໃຈ ແລະ ມາເຫັນວ່າສິ່ງທີ່ພວກເຈົ້າໄດ້ຮັບນັ້ນແມ່ນຫຍັງ, ມັນບໍ່ໄດ້ເປັນຫຍັງເລີຍນອກຈາກການພິພາກສາຂອງເຮົາ! ເຮົາສາມາດປະຕິບັດມັນໄດ້ບໍ ເມື່ອພວກເຈົ້າບໍ່ພະຍາຍາມກິນ ແລະ ດື່ມພຣະທຳຂອງເຮົາ ແລະ ກົງກັນຂ້າມກັບພັດຂັດຂວາງ ແລະ ທຳລາຍການກໍ່ສ້າງຂອງເຮົາຕາມອຳເພີໃຈ? ເຮົາຈະບໍ່ປະຕິບັດຕໍ່ຄົນແບບນີ້ຢ່າງສຸພາບ! ຖ້າພຶດຕິກຳຂອງເຈົ້າເສື່ອມຊາມລົງຢ່າງຮຸນແຮງຂຶ້ນ ເຈົ້າຈະຖືກແປວໄຟກືນກິນ! ພຣະເຈົ້າອົງຊົງລິດທານຸພາບສູງສຸດປາກົດອອກໃນຮ່າງກາຍຝ່າຍວິນຍານ ໂດຍບໍ່ມີເນື້ອໜັງ ຫຼື ເລືອດທີ່ເຊື່ອມໂຍງກັນແຕ່ຫົວຮອດຕີນແມ່ນແຕ່ໜ້ອຍດຽວ. ພຣະອົງຢູ່ເໜືອໂລກຈັກກະວານ, ນັ່ງເທິງບັນລັງທີ່ມີສະຫງ່າລາສີໃນສະຫວັນຊັ້ນຟ້າ, ປົກຄອງທຸກສິ່ງ! ຈັກກະວານ ແລະ ທຸກສິ່ງແມ່ນຢູ່ພາຍໃນມືຂອງເຮົາ. ຖ້າເຮົາກ່າວມັນອອກມາ ມັນກໍຈະເປັນເຊັ່ນນັ້ນ. ຖ້າເຮົາກຳນົດມັນຂຶ້ນ ມັນກໍຈະເປັນເຊັ່ນນັ້ນ. ຊາຕານຢູ່ໃຕ້ຕີນຂອງເຮົາ; ມັນຢູ່ໃນຂຸມເລິກທີ່ບໍ່ສິ້ນສຸດ! ເມື່ອສຽງຂອງເຮົາເປັ່ງອອກມາ, ສະຫວັນ ແລະ ແຜ່ນດິນໂລກຈະຜ່ານພົ້ນໄປ ແລະ ມາສູ່ຄວາມວ່າງເປົ່າ! ທຸກສິ່ງຈະຖືກສ້າງຂຶ້ນໃໝ່; ນີ້ແມ່ນຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້ທີ່ຖືກຕ້ອງຢ່າງແນ່ນອນ. ເຮົາໄດ້ເອົາຊະນະໂລກ ພ້ອມທັງສິ່ງຊົ່ວຮ້າຍທັງໝົດແລ້ວ. ເຮົານັ່ງສົນທະນາກັບພວກເຈົ້າຢູ່ທີ່ນີ້ ແລະ ທຸກຄົນທີ່ມີຫູຄວນຟັງ ແລະ ທຸກຄົນທີ່ມີຊີວິດຢູ່ຄວນຍອມຮັບ.

ວັນເວລາຈະມາເຖິງວາລະສຸດທ້າຍ; ທຸກສິ່ງໃນໂລກນີ້ຈະວ່າງເປົ່າ ແລະ ທຸກສິ່ງຈະເກີດຂຶ້ນໃໝ່. ຈົ່ງຈື່ສິ່ງນີ້ເອົາໄວ້! ຢ່າລືມ! ບໍ່ສາມາດມີຄວາມກຳກວມໄດ້! ສະຫວັນ ແລະ ແຜ່ນດິນຈະຜ່ານພົ້ນໄປ, ແຕ່ພຣະທຳຂອງເຮົາຈະບໍ່ຜ່ານພົ້ນໄປ! ໃຫ້ເຮົາແນະນຳພວກເຈົ້າອີກຄັ້ງ: ຢ່າເຮັດວຽກຢ່າງໄຮ້ຜົນ! ຈົ່ງຕື່ນຂຶ້ນ! ຈົ່ງກັບໃຈ ເພາະຄວາມລອດພົ້ນໃກ້ເຂົ້າມາແລ້ວ! ເຮົາໄດ້ປາກົດຕົວທ່າມກາງພວກເຈົ້າແລ້ວ

ແລະ ສຽງຂອງເຮົາໄດ້ດັງຂຶ້ນແລ້ວ. ສຽງຂອງເຮົາໄດ້ດັງຂຶ້ນຢູ່ຕໍ່ໜ້າພວກເຈົ້າ; ທຸກໆວັນມັນປະເຊີນແບບໜ້າຕໍ່ໜ້າພວກເຈົ້າ ແລະ ແຕ່ລະວັນມັນມີຄວາມສົດໃໝ່. ເຈົ້າເຫັນເຮົາ ແລະ ເຮົາກໍເຫັນເຈົ້າ; ເຮົາເວົ້າກັບເຈົ້າຕະຫຼອດ ແລະ ເຮົາຢູ່ຊ່ອງໜ້າກັບເຈົ້າ. ແນວໃດກໍ່ຕາມ, ເຈົ້າກໍປະຕິເສດເຮົາ ແລະ ບໍ່ຮູ້ຈັກເຮົາ. ແກະຂອງເຮົາໄດ້ຍິນສຽງຂອງເຮົາ, ແຕ່ພວກເຈົ້າຍັງລັງເລໃຈຢູ່! ພວກເຈົ້າລັງເລໃຈ! ຫົວໃຈຂອງເຈົ້າປຶກໜາ, ຕາຂອງເຈົ້າໄດ້ຖືກຊາຕານເຮັດໃຫ້ບອດ ແລະ ເຈົ້າບໍ່ສາມາດເຫັນໃບໜ້າທີ່ມີສະຫງ່າລາສີຂອງເຮົາໄດ້, ເຈົ້າຄືມາໜ້າເວດທະນາແທ້! ໜ້າເວດທະນາແທ້ເດ!

ພຣະວິນຍານທັງເຈັດທີ່ຢູ່ຕໍ່ໜ້າບັນລັງຂອງເຮົາໄດ້ຖືກສົ່ງໄປທຸກມຸມຂອງແຜ່ນດິນໂລກ ແລະ ເຮົາຈະສົ່ງຜູ້ສົ່ງຂ່າວຂອງເຮົາໄປກ່າວຕໍ່ຄຣິສຕະຈັກຕ່າງໆ. ເຮົາຊອບທຳ ແລະ ຊື່ສັດ; ເຮົາແມ່ນພຣະເຈົ້າທີ່ກວດສອບສ່ວນເລິກທີ່ສຸດໃນຫົວໃຈມະນຸດ. ພຣະວິນຍານບໍລິສຸດກ່າວຕໍ່ຄຣິສຕະຈັກຕ່າງໆ ແລະ ແມ່ນພຣະທຳຂອງເຮົາທີ່ອອກຈາກຂ້າງໃນພຣະບຸດຂອງເຮົາ; ທຸກຄົນທີ່ມີຫູຄວນຟັງເອົາ! ທຸກຄົນທີ່ມີຊີວິດຢູ່ຄວນຍອມຮັບເອົາ! ພຽງແຕ່ກິນ ແລະ ດື່ມພຣະທຳເຫຼົ່ານັ້ນ ແລະ ຢ່າສົງໄສເລີຍ. ທຸກຄົນທີ່ຍອມ ແລະ ໃສ່ໃຈພຣະທຳຂອງເຮົາຈະໄດ້ຮັບພອນທີ່ຍິ່ງໃຫຍ່! ທຸກຄົນທີ່ສະແຫວງຫາໃບໜ້າຂອງເຮົາຢ່າງຈິງຈັງຈະໄດ້ຮັບແສງສະຫວ່າງໃໝ່, ຄວາມສະຫວ່າງອັນໃໝ່ ແລະ ຄວາມເຂົ້າໃຈໃໝ່ຢ່າງແນ່ນອນ; ທຸກຢ່າງຈະສົດ ແລະ ໃໝ່. ພຣະທຳຂອງເຮົາຈະປາກົດແກ່ເຈົ້າທຸກເວລາ ແລະ ພວກມັນຈະເປີດດວງຕາແຫ່ງວິນຍານຂອງເຈົ້າເພື່ອວ່າເຈົ້າຈະສາມາດເຫັນຄວາມລຶກລັບທັງໝົດຂອງໂລກຝ່າຍວິນຍານ ແລະ ເຫັນວ່າອານາຈັກຢູ່ທ່າມກາງມະນຸດ. ເຂົ້າໄປໃນບ່ອນລີ້ໄພ ແລ້ວພຣະຄຸນ ແລະ ພອນທັງໝົດຈະມາສູ່ເຈົ້າ; ຄວາມອຶດຢາກ ແລະ ໂລກລະບາດຈະບໍ່ສາມາດແຕະຕ້ອງເຈົ້າໄດ້ ແລະ ໝາປ່າ, ງູ, ເສືອ ແລະ ເສືອດາວຈະບໍ່ສາມາດທຳຮ້າຍເຈົ້າໄດ້. ເຈົ້າຈະໄປກັບເຮົາ, ຍ່າງກັບເຮົາ ແລະ ເຂົ້າສູ່ສະຫງ່າລາສີຮ່ວມກັບເຮົາ!

ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ຮ່າງກາຍທີ່ມີສະຫງ່າລາສີຂອງພຣະອົງປາກົດໃນບ່ອນເປີດ, ຮ່າງກາຍຝ່າຍວິນຍານອັນບໍລິສຸດບັງເກີດຂຶ້ນ ແລະ ພຣະອົງແມ່ນພຣະເຈົ້າເອງທີ່ສົມບູນແບບ! ທັງໂລກ ແລະ ເນື້ອໜັງໄດ້ຖືກປ່ຽນແປງ ແລະ ການປ່ຽນຮູບຂອງພຣະອົງຢູ່ເທິງພູແມ່ນຕົວຕົນຂອງພຣະເຈົ້າ. ພຣະອົງສວມມຸງກຸດຄຳເທິງຫົວຂອງພຣະອົງ, ເຄື່ອງນຸ່ງຂອງພຣະອົງຂາວບໍລິສຸດ, ຄຽນເອິກດ້ວຍສາຍແອວຄຳ ແລະ ໂລກ ແລະ ທຸກສິ່ງແມ່ນຂຽງຮອງພຣະບາດຂອງພຣະອົງ. ດວງຕາຂອງພຣະອົງເປັນຄືແປວໄຟ, ພຣະອົງຖືດາບສອງຄົມໃນປາກຂອງພຣະອົງ ແລະ ພຣະອົງມີດາວເຈັດດວງຢູ່ໃນມືຂວາຂອງພຣະອົງ. ຫົນທາງສູ່ອານາຈັກນັ້ນຮຸ່ງແຈ້ງຫຼາຍ ແລະ ສະຫງ່າລາສີຂອງພຣະອົງໂຜ່ຂຶ້ນ ແລະ ສ່ອງແສງ; ພູຕ່າງໆປິຕິຍິນດີ ແລະ ນໍ້າຕ່າງໆກໍຫົວຂວັນ, ດວງຕາເວັນ, ດວງເດືອນ ແລະ ດາວຕ່າງໆກໍລ້ອນແລ້ວແຕ່ໝູນໄປຕາມການຈັດແຈງທີ່ເປັນລະບຽບຂອງພວກມັນ ຕ້ອນຮັບພຣະເຈົ້າທີ່ມີເອກະລັກ ແລະ ເປັນຈິງ ເຊິ່ງການກັບຄືນມາຂອງພຣະອົງປ່າວປະກາດຄວາມສຳເລັດຂອງແຜນການຄຸ້ມຄອງຫົກພັນປີຂອງພຣະອົງ. ທັງໝົດຕ່າງກໍກະໂດດ ແລະ ເຕັ້ນລຳຢ່າງມີຄວາມສຸກ! ຊົມເຊີຍ! ພຣະເຈົ້າອົງຊົງລິດທານຸພາບສູງສຸດນັ່ງຢູ່ເທິງບັນລັງອັນມີສະຫງ່າລາສີຂອງພຣະອົງ! ຈົ່ງຮ້ອງເພງ! ປ້າຍແຫ່ງໄຊຊະນະຂອງ

ອົງຊົງລິດທານຸພາບສູງສຸດໄດ້ຖືກຍົກຂຶ້ນສູງເທິງພູຊີໂອນທີ່ສະຫງ່າງາມ ແລະ ງົດງາມ! ປະຊາຊາດທັງໝົດກຳລັງຊົມເຊີຍ, ທຸກຄົນກຳລັງຮ້ອງເພງ, ພູຊີໂອນກຳລັງຫົວຢ່າງປິຕິຍິນດີ ແລະ ສະຫງ່າລາສີຂອງພຣະເຈົ້າໄດ້ໂຜ່ຂຶ້ນ! ຂ້ານ້ອຍບໍ່ເຄີຍແມ່ນແຕ່ຝັນວ່າເຮົາຈະໄດ້ເຫັນໃບໜ້າຂອງພຣະເຈົ້າ, ແຕ່ມື້ນີ້ຂ້ານ້ອຍໄດ້ເຫັນແລ້ວ. ເມື່ອຢູ່ຊ້ອງໜ້າກັບພຣະອົງທຸກໆວັນ, ຂ້ານ້ອຍເປີດເຜີຍຫົວໃຈຂອງຂ້ານ້ອຍກັບພຣະອົງ. ພຣະອົງປະທານອາຫານ ແລະ ເຄື່ອງດື່ມໃຫ້ຢ່າງອຸດົມສົມບູນ. ຊີວິດ, ຄຳເວົ້າ, ການກະທຳ, ຄວາມຄິດ, ແນວຄວາມຄິດ ນັ້ນກໍຄືແສງສະຫວ່າງທີ່ມີສະຫງ່າລາສີຂອງພຣະອົງໄດ້ສ່ອງແສງໃຫ້ແກ່ພວກມັນທັງໝົດ. ພຣະອົງນຳພາທຸກບາດກ້າວໃນຫົນທາງ ແລະ ການພິພາກສາຂອງພຣະອົງນັ້ນເກີດຂຶ້ນກັບຫົວໃຈໃດກໍຕາມທີ່ກະບົດຢ່າງທັນທີທັນໃດ.

ກິນ, ຢູ່ຮ່ວມກັນ ແລະ ດຳລົງຊີວິດຮ່ວມກັບພຣະເຈົ້າ, ຢູ່ຮ່ວມກັບພຣະອົງ, ຍ່າງຮ່ວມກັນ, ມີຄວາມສຸກຮ່ວມກັນ, ໄດ້ຮັບສະຫງ່າລາສີ ແລະ ພອນຮ່ວມກັນ, ຮ່ວມໃນຄວາມເປັນກະສັດກັບພຣະອົງ ແລະ ດຳລົງຢູ່ຮ່ວມກັນໃນອານາຈັກ, ໂອ ມັນຊ່າງເປັນຄວາມສຸກ! ໂອ ມັນຊ່າງຫວານຊື່ນແທ້! ພວກເຂົາຢູ່ຊ້ອງໜ້າກັບພຣະອົງທຸກໆມື້, ເວົ້າຈາກັບພຣະອົງທຸກໆວັນ ແລະ ລົມຢ່າງສະໝໍ່າສະເໝີ ແລະ ໄດ້ຮັບການສ່ອງສະຫວ່າງອັນໃໝ່ ແລະ ຄວາມເຂົ້າໃຈໃໝ່ທຸກໆມື້. ດວງຕາຝ່າຍວິນຍານຂອງພວກເຮົາໄດ້ຖືກເປີດອອກ ແລະ ພວກເຮົາເຫັນທຸກສິ່ງ; ຄວາມເລິກລັບທັງໝົດຂອງວິນຍານໄດ້ຖືກເປີດເຜີຍໃຫ້ແກ່ພວກເຮົາ. ຊີວິດທີ່ບໍລິສຸດນັ້ນໄຮ້ກັງວົນແທ້ໆ; ແລ່ນໄວ ແລະ ບໍ່ຢຸດເຊົາ ແລະ ເຄື່ອນໄປຂ້າງໜ້າຢ່າງຕໍ່ເນື່ອງ, ມີຊີວິດທີ່ໜ້າອັດສະຈັນໃຈຫຼາຍກວ່າຢູ່ຂ້າງໜ້າ. ຢູ່ພໍໃຈກັບລົດຊາດຫວານພຽງຢ່າງດຽວ; ຈົ່ງສະແຫວງຫາຢ່າງຕໍ່ເນື່ອງເພື່ອເຂົ້າຫາພຣະເຈົ້າ. ພຣະອົງຄວບຄຸມທຸກສິ່ງ ແລະ ອຸດົມສົມບູນ ແລະ ມີທຸກປະເພດຂອງສິ່ງຕ່າງໆທີ່ພວກເຂົາຂາດເຂີນ. ຈົ່ງຮ່ວມມືຢ່າງຫ້າວຫັນ ແລະ ເຂົ້າຫາພຣະອົງ ແລະ ຈະບໍ່ມີຫຍັງເປັນຄືເກົ່າອີກເລີຍ. ຊີວິດຂອງພວກເຮົາຈະເໜືອກວ່າສິ່ງອື່ນໃດ ແລະ ບໍ່ມີຄົນໃດ, ເລື່ອງໃດ ຫຼື ສິ່ງໃດຈະສາມາດລົບກວນພວກເຮົາໄດ້.

ຍອດຍ້ຽມ! ຍອດຍ້ຽມ! ຄວາມຍອດຢ້ຽມທີ່ແທ້ຈິງ! ຊີວິດທີ່ຍອດຢ້ຽມຂອງພຣະເຈົ້າຢູ່ພາຍໃນ ແລະ ທຸກສິ່ງໄດ້ຜ່ອນຄາຍຢ່າງແທ້ຈິງ! ພວກເຮົາຂ້າມຜ່ານໂລກ ແລະ ສິ່ງຕ່າງໆໃນໂລກ, ບໍ່ຮູ້ສຶກຜູກພັນກັບສາມີ ຫຼື ລູກໆ. ພວກເຮົາຂ້າມຜ່ານການຄວບຄຸມຂອງຄວາມເຈັບປ່ວຍ ແລະ ສະພາບແວດລ້ອມ. ຊາຕານບໍ່ກ້າທີ່ຈະລົບກວນພວກເຮົາ. ພວກເຮົາຂ້າມຜ່ານໄພພິບັດທັງໝົດຢ່າງສິ້ນເຊີງ. ນີ້ເປັນການອະນຸຍາດໃຫ້ພຣະເຈົ້າຮັບເອົາຄວາມເປັນກະສັດ! ພວກເຮົາຢຽບຢໍ່າຊາຕານລົງໃຕ້ຕີນ, ຢືນເປັນພະຍານໃຫ້ແກ່ຄຣິສຕະຈັກ ແລະ ເປີດໂປງໃບໜ້າທີ່ຂີ້ຮ້າຍຂອງຊາຕານຢ່າງທົ່ວເຖິງ. ການກໍ່ສ້າງຄຣິສຕະຈັກແມ່ນຢູ່ໃນພຣະຄຣິດ ແລະ ຮ່າງກາຍທີ່ມີສະຫງ່າລາສີກໍໄດ້ໂຜ່ຂຶ້ນ, ນີ້ແມ່ນການດຳລົງຊີວິດຢູ່ໃນຄວາມປາບປື້ມໃຈ!

# ບົດທີ 16

ຫຼັງຈາກທີ່ໄດ້ເປັນພະຍານເຖິງບຸດມະນຸດ, ພຣະເຈົ້າອົງຊົງລິດທານຸພາບສູງສຸດໄດ້ສະແດງຕົວຕົນຢ່າງເປີດເຜີຍຕໍ່ພວກເຮົາດັ່ງດວງຕາເວັນແຫ່ງຄວາມຊອບທຳ. ນີ້ແມ່ນການແປງກາຍຢູ່ເທິງພູເຂົາ! ບັດນີ້ ມັນຍິ່ງເປັນຈິງເພີ່ມຂຶ້ນເລື້ອຍໆ ແລະ ມີຄວາມເປັນຈິງຍິ່ງຂຶ້ນ. ພວກເຮົາໄດ້ເຫັນວ່າເຖິງພຣະວິນຍານບໍລິສຸດປະຕິບັດພາລະກິດແນວໃດ ແລະ ພຣະເຈົ້າເອງໄດ້ປາກົດຕົວອອກຈາກ ເນື້ອໜັງ. ພຣະອົງບໍ່ຢູ່ພາຍໃຕ້ການຄວບຄຸມຂອງມະນຸດ ຫຼື ອາວະກາດ ຫຼື ພູມສາດ; ພຣະອົງຢູ່ເໜືອຂອບເຂດຂອງແຜ່ນດິນໂລກ ແລະ ທະເລ, ພຣະອົງແຜ່ຂະຫຍາຍໄປທົ່ວຈັກກະວານຈົນສຸດປາຍແຜ່ນດິນໂລກ ແລະ ທົ່ວປະຊາຊາດ ແລະ ທຸກຄົນກຳລັງຟັງສຽງຂອງພຣະອົງຢ່າງງຽບສະຫງົບ. ເມື່ອພວກເຮົາມີນຕາແຫ່ງວິນຍານຂອງພວກເຮົາ ພວກເຮົາເຫັນວ່າ ພຣະທຳຂອງພຣະເຈົ້າໄດ້ສ່ອງແສງອອກມາຈາກຮ່າງກາຍທີ່ສະຫງ່າງາມຂອງພຣະອົງ; ນີ້ແມ່ນພຣະເຈົ້າເອງທີ່ປາກົດຕົວອອກມາຈາກເນື້ອໜັງ. ພຣະອົງເອງເປັນພຣະເຈົ້າທີ່ເປັນຈິງ ແລະ ສົມບູນ. ພຣະອົງກ່າວກັບພວກເຮົາຢ່າງເປີດເຜີຍ, ພຣະອົງຢູ່ຕໍ່ໜ້າພວກເຮົາ, ພຣະອົງແນະນຳພວກເຮົາ, ພຣະອົງເມດຕາພວກເຮົາ, ພຣະອົງຄອງຖ້າພວກເຮົາ, ພຣະອົງປອບໃຈພວກເຮົາ, ພຣະອົງລົງວິໄນພວກເຮົາ ແລະ ພຣະອົງພິພາກສາພວກເຮົາ. ພຣະອົງນຳພາພວກເຮົາດ້ວຍມືຂອງພຣະອົງເອງ ແລະ ຄວາມເປັນຫ່ວງຂອງພຣະອົງສຳລັບພວກເຮົາກຳເຜົາໄໝ້ຄືກັບແປວໄຟທີ່ຢູ່ພາຍໃນພຣະອົງ; ພຣະອົງຟ້າວປຸກພວກເຮົາໃຫ້ຕື່ນ ແລະ ເຂົ້າເຖິງພຣະອົງດ້ວຍຫົວໃຈທີ່ຮ້ອນຮົນ. ຊີວິດທີ່ເໜືອທຳມະຊາດຂອງພຣະອົງໄດ້ປູກຝັງຢູ່ໃນໃຈຂອງພວກເຮົາທຸກຄົນ ແລະ ທຸກຄົນທີ່ເຂົ້າເຖິງພຣະອົງກໍຈະບັນລຸຄວາມເປັນເລີດ ແລະ ເອົາຊະນະໂລກ ແລະ ທຸກສິ່ງທີ່ຊົ່ວຮ້າຍ ແລະ ປົກຄອງດັ່ງກະສັດຮ່ວມກັບພຣະອົງ. ພຣະເຈົ້າອົງຊົງລິດທານຸພາບສູງສຸດແມ່ນຮ່າງກາຍແຫ່ງວິນຍານຂອງພຣະເຈົ້າ. ຖ້າພຣະອົງກຳນົດ ແລ້ວມັນກໍຈະເປັນດັ່ງນັ້ນ; ຖ້າພຣະອົງກ່າວ ມັນກໍຈະເປັນດັ່ງນັ້ນ ແລະ ຖ້າພຣະອົງຕັດສັ່ງ ແລ້ວມັນກໍຈະເປັນດັ່ງນັ້ນ. ພຣະອົງເປັນພຣະເຈົ້າທີ່ແທ້ຈິງພຽງອົງດຽວ! ຊາຕານຢູ່ໃຕ້ພຣະບາດຂອງພຣະອົງ ແລະ ຢູ່ໃນຂຸມເລິກທີ່ຢັ່ງບໍ່ເຖິງ. ຈັກກະວານ ແລະ ທຸກສິ່ງຢູ່ໃນກຳມືຂອງພຣະອົງ; ເວລານັ້ນມາເຖິງແລ້ວ ແລະ ທຸກຄົນຈະກັບຄືນສູ່ຄວາມວ່າງເປົ່າ ແລະ ເກີດໃໝ່.

# ບົດທີ 17

ຄຣິສຕະຈັກກຳລັງກໍ່ສ້າງ ແລະ ຊາຕານກໍກຳລັງພະຍາຍາມທີ່ສຸດທີ່ຈະທຳລາຍມັນ. ມັນຕ້ອງການທຳລາຍການກໍ່ສ້າງຂອງເຮົາດ້ວຍທຸກວິທີທາງທີ່ເປັນໄປໄດ້; ດ້ວຍເຫດນີ້, ຄຣິສຕະຈັກຕ້ອງຖືກເຮັດໃຫ້ບໍລິສຸດໂດຍໄວ. ຕ້ອງບໍ່ເຫຼືອສິ່ງຊົ່ວຮ້າຍແມ່ນແຕ່ໜ້ອຍດຽວ; ຄຣິສຕະຈັກຕ້ອງຖືກເຮັດໃຫ້ບໍລິສຸດເພື່ອມັນຈະບໍ່ມີຂໍ້ບົກຜ່ອງ ແລະ ສືບຕໍ່ບໍລິສຸດຄືກັບໃນອະດີດ. ພວກເຈົ້າຕ້ອງຕື່ນຕົວ ແລະ ລໍຖ້າຢູ່ຕະຫຼອດເວລາ, ພວກເຈົ້າຕ້ອງອະທິຖານຫາເຮົາຫຼາຍຂຶ້ນ. ພວກເຈົ້າຕ້ອງຮັບຮູ້ແຜນການຕ່າງໆ ແລະ ແຜນການອັນສະຫຼາດຫຼັກແຫຼມຂອງຊາຕານ, ຮັບຮູ້ວິນຍານ, ຮູ້ຈັກຄົນ ແລະ ສາມາດແຍກແຍະຄົນທຸກປະເພດ, ເຫດການ ແລະ ສິ່ງຕ່າງໆ; ພວກເຈົ້າຕ້ອງກິນ ແລະ ດື່ມພຣະທຳຂອງເຮົາຫຼາຍຂຶ້ນເຊັ່ນກັນ, ສຳຄັນໄປກວ່ານັ້ນ, ພວກເຈົ້າຕ້ອງສາມາດກິນ ແລະ ດື່ມພວກມັນດ້ວຍຕົວພວກເຈົ້າເອງ. ຈົ່ງຕຽມຕົວໃຫ້ພ້ອມດ້ວຍຄວາມຈິງທັງໝົດ ແລະ ມາຢູ່ຕໍ່ໜ້າເຮົາ ເພື່ອວ່າເຮົາອາດຈະເປີດດວງຕາຝ່າຍຈິດວິນຍານຂອງພວກເຈົ້າ ແລະ ອະນຸຍາດໃຫ້ພວກເຈົ້າເຫັນຄວາມເລິກລັບທັງໝົດທີ່ຢູ່ໃນວິນຍານໄດ້... ເມື່ອຄຣິສຕະຈັກເຂົ້າສູ່ໄລຍະການກໍ່ສ້າງຂອງມັນ, ບັນດາໄພ່ພົນກໍຍ່າງເຂົ້າສູ່ການສູ້ຮົບ. ຄຸນລັກສະນະຕ່າງໆທີ່ໜ້າກຽດຊັງຂອງຊາຕານໄດ້ຖືກຕັ້ງໄວ້ຕໍ່ໜ້າພວກເຈົ້າ: ພວກເຈົ້າຢຸດ ແລະ ເຄື່ອນຖອຍຫຼັງບໍ ຫຼື ໂດຍໄວ້ວາງໃຈໃນເຮົາ, ພວກເຈົ້າລຸກຢືນຂຶ້ນ ແລະ ກ້າວໄປຂ້າງໜ້າ? ຈົ່ງເປີດເຜີຍຄຸນລັກສະນະອັນເສື່ອມຊາມ ແລະ ໜ້າລັງກຽດຂອງຊາຕານຢ່າງລະອຽດ, ຢ່າເຫັນໃຈ ແລະ ສະແດງຄວາມເມດຕາ! ສູ້ກັບຊາຕານຈົນເຖິງຕາຍ! ເຮົາເປັນກອງໜຸນຂອງພວກເຈົ້າ ແລະ ພວກເຈົ້າຕອງມີຈິດວິນຍານຂອງເດັກຊາຍ! ຊາຕານກຳລັງໂຈມຕີຢ່າງດີ້ນຕາຍໃນຄັ້ງສຸດທ້າຍຂອງມັນ ແຕ່ມັນກໍຍັງບໍ່ສາມາດຫຼົບໜີການພິພາກສາຂອງເຮົາໄດ້. ຊາຕານຢູ່ໃຕ້ຕີນເຮົາ ແລະ ມັນກໍກຳລັງຖືກຢຽບຢໍ່າຢູ່ໃຕ້ຕີນຂອງພວກເຈົ້າເອງອີກດ້ວຍ, ນີ້ແມ່ນຄວາມຈິງ!

ບັນດາຜູ້ທີ່ຂັດຂວາງສາສະໜາທັງໝົດ ແລະ ບັນດາຜູ້ທີ່ທຳລາຍການກໍ່ສ້າງຂອງຄຣິສຕະຈັກບໍ່ສາມາດໄດ້ຮັບການອົດກັ້ນແມ່ນແຕ່ໜ້ອຍດຽວ, ແຕ່ຈະຖືກພິພາກສາທັນທີ; ຊາຕານຈະຖືກເປີດເຜີຍ, ຢຽບ, ທຳລາຍຢ່າງສິ້ນເຊີງ ແລະ ບໍ່ມີບ່ອນໄວ້ໃຫ້ລີ້. ລັກສະນະທັງໝົດຂອງຜີສາດ ແລະ ຜີຕ່າງໆຈະເປີດເຜີຍຮູບແບບທີ່ແທ້ຈິງຂອງພວກມັນຕໍ່ໜ້າເຮົາ ແລະ ເຮົາຈະໂຍນພວກມັນທັງໝົດລົງໃນຂຸມເລິກທີ່ສຸດ ເຊິ່ງພວກມັນຈະບໍ່ມີວັນເປັນອິດສະຫຼະໄດ້; ພວກມັນທັງໝົດຈະຢູ່ໃຕ້ຕີນຂອງພວກເຮົາ. ຖ້າພວກເຈົ້າຕ້ອງການຕໍ່ສູ້ຈົນເຖິງທີ່ສຸດເພື່ອຄວາມຈິງ, ກ່ອນອື່ນໝົດ, ພວກເຈົ້າຕ້ອງບໍ່ເປີດໂອກາດໃຫ້ຊາຕານເຮັດວຽກຂອງມັນ, ດ້ວຍເຫດນີ້, ພວກເຈົ້າຈະຕ້ອງເປັນຈິດໜຶ່ງໃຈດຽວກັນ ແລະ ສາມາດປະຕິບັດດ້ວຍການປະສານງານກັນ, ປະຖິ້ມແນວຄິດທັງໝົດ, ຄຳຄິດເຫັນ, ມຸມມອງ ແລະ ວິທີການເຮັດສິ່ງຕ່າງໆ, ສະຫງົບຫົວໃຈຂອງພວກເຈົ້າຢູ່ໃນເຮົາ, ສຸມໃສ່ສຽງຂອງພຣະວິນຍານບໍລິສຸດ, ເອົາໃຈໃສ່ຕໍ່ພາລະກິດຂອງພຣະວິນຍານບໍລິສຸດ ແລະ ປະສົບກັບພຣະທຳຂອງພຣະເຈົ້າຢ່າງລະອຽດ. ພວກເຈົ້າຕ້ອງມີຄວາມຕັ້ງໃຈຢ່າງດຽວເທົ່ານັ້ນ, ນັ້ນກໍຄືການເຮັດໃຫ້ຄວາມປະສົງຂອງເຮົາສຳເລັດ. ພວກເຈົ້າບໍ່

ຄວນມີຄວາມຕັ້ງໃຈອື່ນນອກຈາກນີ້. ພວກເຈົ້າຕ້ອງແນມເບິ່ງເຮົາດ້ວຍສຸດໃຈຂອງພວກເຈົ້າ, ເບິ່ງການກະທຳຂອງເຮົາ ແລະ ວິທີທີ່ເຮົາເຮັດສິ່ງຕ່າງໆຢ່າງໃກ້ຊິດ ແລະ ຢ່າລະເລີຍ. ຈິດວິນຍານຂອງພວກເຈົ້າຕ້ອງແຫຼມຄົມ ແລະ ຈົ່ງເປີດຕາຂອງພວກເຈົ້າ. ປົກກະຕິແລ້ວ, ເມື່ອເວົ້າເຖິງບັນດາຜູ້ທີ່ມີຄວາມຕັ້ງໃຈ ແລະ ຈຸດປະສົງທີ່ບໍ່ຖືກຕ້ອງ, ພ້ອມດ້ວຍບັນດາຜູ້ທີ່ມັກໃຫ້ຄົນອື່ນຍ້ອງຍໍ, ຜູ້ທີ່ກະຕືລືລົ້ນເຮັດສິ່ງຕ່າງໆ, ຜູ້ທີ່ມັກເຮັດໃຫ້ເກີດຄວາມວຸ້ນວາຍ, ຜູ້ທີ່ເກັ່ງໃນການຄຸຍໂມ້ກັບຫຼັກຄຳສອນທາງສາສະໜາ, ຜູ້ທີ່ເປັນລູກນ້ອງຂອງຊາຕານ ແລະ ອື່ນໆອີກ, ເມື່ອຄົນເຫຼົ່ານີ້ຢືນຂຶ້ນ, ພວກເຂົາສ້າງຄວາມຫຍຸ້ງຍາກໃຫ້ກັບຄຣິສຕະຈັກ ແລະ ນີ້ເຮັດໃຫ້ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າຂອງອ້າຍເອື້ອຍນ້ອງຂອງພວກເຂົາບໍ່ມີຜົນຫຍັງເລີຍ. ເມື່ອພວກເຈົ້າພົບກັບຄົນທີ່ຫຼິ້ນບົດລະຄອນເຊັ່ນນີ້, ຈົ່ງຫ້າມພວກເຂົາທັນທີ. ຖ້າວ່າໄດ້ມີການຕັກເຕືອນຊ້ຳແລ້ວຊ້ຳອີກ, ແລ້ວພວກເຂົາຍັງບໍ່ປ່ຽນແປງ, ພວກເຂົາກໍຈະທົນທຸກກັບການສູນເສຍ. ຖ້າບັນດາຜູ້ທີ່ຢືນຢັນໃນຫົນທາງຂອງພວກເຂົາຢ່າງດື້ດ້ານພະຍາຍາມປົກປ້ອງຕົວເອງ ແລະ ພະຍາຍາມປົກປິດບາບຂອງພວກເຂົາ, ຄຣິສຕະຈັກຄວນຕັດພວກເຂົາອອກທັນທີ ແລະ ບໍ່ຕ້ອງປ່ອຍໃຫ້ພວກເຂົາມີບ່ອນໃຫ້ເຄື່ອນໄຫວ. ຢ່າສູນເສຍຄົນສ່ວນຫຼາຍໂດຍການພະຍາຍາມຊ່ວຍຄົນສ່ວນໜ້ອຍ; ຈົ່ງເບິ່ງພາບລວມ.

ຕອນນີ້ດວງຕາຝ່າຍຈິດວິນຍານຂອງພວກເຈົ້າຕ້ອງຖືກເປີດອອກ ແລະ ສາມາດແຍກແຍະຄົນປະເພດຕ່າງໆໃນຄຣິສຕະຈັກ:

ຄົນປະເພດໃດເຂົ້າໃຈເລື່ອງຝ່າຍວິນຍານ ແລະ ຮູ້ຈັກວິນຍານບໍ່?

ຄົນປະເພດໃດບໍ່ເຂົ້າໃຈເລື່ອງຝ່າຍວິນຍານ?

ຄົນປະເພດໃດມີຈິດວິນຍານຊົ່ວຮ້າຍ?

ຄົນປະເພດໃດມີພາລະກິດຂອງຊາຕານຢູ່ໃນຕົວພວກເຂົາ?

ຄົນປະເພດໃດມັກກໍ່ໃຫ້ເກີດຄວາມວຸ້ນວາຍ?

ຄົນປະເພດໃດມີພາລະກິດຂອງພຣະວິນຍານບໍລິສຸດຢູ່ໃນຕົວພວກເຂົາ?

ຄົນປະເພດໃດມີການພິຈາລະນາຕໍ່ພາລະຂອງພຣະເຈົ້າ?

ຄົນປະເພດໃດສາມາດເຮັດຕາມຄວາມປະສົງຂອງເຮົາ?

ໃຜເປັນພະຍານທີ່ຊື່ສັດຂອງເຮົາ?

ຈົ່ງຮູ້ໄວ້ວ່າ ນິມິດສູງສຸດຂອງມື້ນີ້ແມ່ນການສ່ອງສະຫວ່າງທີ່ພຣະວິນຍານບໍລິສຸດນຳມາສູ່ຄຣິສຕະຈັກ. ຢ່າມົວສັບສົນຢູ່ກັບສິ່ງເຫຼົ່ານີ້ເລີຍ; ກົງກັນຂ້າມ, ຈົ່ງໃຊ້ເວລາເພື່ອຄິດພວກມັນໃຫ້ອອກຢ່າງລະອຽດ, ນີ້ເປັນສິ່ງສຳຄັນທີ່ສຸດສຳລັບຄວາມກ້າວໜ້າຂອງຊີວິດພວກເຈົ້າ! ຖ້າພວກເຈົ້າບໍ່ເຂົ້າໃຈສິ່ງເຫຼົ່ານີ້ທີ່ຢູ່ຕໍ່ໜ້າພວກເຈົ້າ, ແລ້ວພວກເຈົ້າກໍຈະບໍ່ສາມາດຍ່າງໄປທາງຂ້າງໜ້າໄດ້; ພວກເຈົ້າຈະຕົກຢູ່ໃນອັນຕະລາຍຕໍ່ການຫຼອກລວງ ແລະ ການຕົກເປັນຊະເລີຍຕະຫຼອດເວລາ ແລະ ເຈົ້າອາດຈະຖືກກືນກິນ. ສິ່ງຫຼັກໆທີ່ຕ້ອງເຮັດຕອນນີ້ຄື ສຸມໃສ່ໃນການສາມາດຫຍັບເຂົ້າໃກ້ເຮົາໃນຫົວໃຈຂອງພວກເຈົ້າ ແລະ ສື່ສານກັບເຮົາຫຼາຍຂຶ້ນ. ສິ່ງໃດກໍຕາມທີ່ພວກເຈົ້າຂາດ ຫຼື ສະແຫວງຫາຈະຖືກເຮັດໃຫ້ພວກເຈົ້າ

ສົມບູນໂດຍຄວາມໃກ້ຊິດ ແລະ ການສື່ສານດັ່ງກ່າວ. ຊີວິດຂອງພວກເຈົ້າຈະຖືກສະໜອງໃຫ້ຢ່າງແນ່ນອນ ແລະ ພວກເຈົ້າຈະມີແສງສະຫວ່າງໃໝ່. ເຮົາບໍ່ເຄີຍຫຼຽວເບິ່ງວ່າພວກເຈົ້າໂງ່ຈ້າພຽງໃດໃນອະດີດ ແລະ ເຮົາບໍ່ເຄີຍເກັບການລະເມີດໃນອະດີດຂອງພວກເຈົ້າໄວ້ໃນໃຈເຮົາ. ເຮົາແນມເບິ່ງວ່າພວກເຈົ້າຮັກເຮົາແນວໃດ: ພວກເຈົ້າສາມາດຮັກເຮົາໄດ້ຫຼາຍກວ່າສິ່ງອື່ນໃດບໍ? ເຮົາແນມເບິ່ງວ່າເຈົ້າສາມາດຫັນກັບ ແລະ ເພິ່ງພາເຮົາເພື່ອຂັບໄລ່ຄວາມບໍ່ຮູ້ຂອງເຈົ້າໄດ້ ຫຼື ບໍ່. ບາງຄົນຕໍ່ຕ້ານເຮົາ, ທ້າທາຍເຮົາຢ່າງເປີດເຜີຍ ແລະ ຕັດສິນຄົນອື່ນ; ພວກເຂົາບໍ່ຮູ້ຈັກພຣະທຳຂອງເຮົາ, ແຮງແລ້ວທີ່ຈະຄົ້ນຫາສີໜ້າຂອງເຮົາ. ບັນດາຜູ້ທີ່ຊອກຫາເຮົາຢ່າງຈິງໃຈຕໍ່ໜ້າເຮົາ, ຜູ້ມີຫົວໃຈທີ່ຫິວໂຫຍ ແລະ ກະຫາຍຄວາມຊອບທຳ, ເຮົາຈະສ່ອງສະຫວ່າງແກ່ເຈົ້າ, ເປີດເຜີຍຕໍ່ເຈົ້າ, ອະນຸຍາດໃຫ້ເຈົ້າເຫັນເຮົາດ້ວຍຕາຂອງເຈົ້າເອງ ແລະ ເຂົ້າໃຈຄວາມປະສົງຂອງເຮົາເປັນການສ່ວນຕົວ; ຫົວໃຈຂອງເຮົາຈະຖືກເປີດເຜີຍແກ່ເຈົ້າຢ່າງແນ່ນອນ ເພື່ອວ່າເຈົ້າອາດຈະເຂົ້າໃຈ. ເຈົ້າຕ້ອງປະຕິບັດສິ່ງທີ່ເຮົາສ່ອງແສງພາຍໃນຕົວເຈົ້າຕາມພຣະທຳຂອງເຮົາ; ບໍ່ດັ່ງນັ້ນ, ເຈົ້າຈະຖືກພິພາກສາ. ຈົ່ງປະຕິບັດຕາມຄວາມປະສົງຂອງເຮົາ ແລ້ວເຈົ້າຈະບໍ່ຫຼົງທາງ.

ສຳລັບບັນດາຜູ້ທີ່ສະແຫວງຫາເຂົ້າສູ່ພຣະທຳຂອງເຮົາທັງໝົດ, ພຣະຄຸນ ແລະ ພອນຕ່າງໆຈະເພີ່ມເປັນສອງເທົ່າແກ່ພວກເຂົາ, ພວກເຂົາຈະໄດ້ຮັບຄວາມສະຫວ່າງ ແລະ ຄວາມເຂົ້າໃຈໃໝ່ທຸກໆວັນ, ພວກເຂົາຈະຮູ້ສຶກສົດຊື່ນໃນການກິນ ແລະ ດື່ມພຣະທຳຂອງເຮົາທຸກມື້. ພວກເຂົາຈະໄດ້ຊີມລົດຊາດຂອງມັນດ້ວຍປາກຂອງພວກເຂົາເອງ: ຊ່າງຫວານຊື່ນແທ້! ... ເຈົ້າຕ້ອງລະມັດລະວັງ ແລະ ຢ່າພໍໃຈເມື່ອເຈົ້າໄດ້ຮັບບາງຄວາມເຂົ້າໃຈ ແລະ ລົດຊາດຂອງຄວາມຫວານ; ກະແຈສຳຄັນແມ່ນຕ້ອງສືບຕໍ່ສະແຫວງຫາຕໍ່ໄປ! ບາງຄົນຄິດວ່າພາລະກິດຂອງພຣະວິນຍານບໍລິສຸດນັ້ນໜ້າອັດສະຈັນ ແລະ ເປັນຈິງແທ້ໆ, ແທ້ຈິງແລ້ວ ນີ້ແມ່ນຕົວຕົນຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດທີ່ຖືກເປີດເຜີຍຢ່າງເປີດເຜີຍ ແລະ ຈະມີໝາຍສຳຄັນ ແລະ ຄວາມມະຫັດສະຈັນທີ່ຍິ່ງໃຫຍ່ກວ່າຢູ່ຂ້າງໜ້າ. ຈົ່ງລະມັດລະວັງ ແລະ ຕື່ນຕົວຢູ່ຕະຫຼອດເວລາ, ຈັບຕາເບິ່ງແຫຼ່ງກຳເນີດໃຫ້ດີ, ຈົ່ງສະຫງົບຢູ່ຕໍ່ໜ້າເຮົາ, ຈົ່ງຟັງ ແລະ ຕັ້ງໃຈຟັງໃຫ້ດີ ແລະ ຈົ່ງໝັ້ນໃຈໃນພຣະທຳຂອງເຮົາ. ຕ້ອງບໍ່ມີຄວາມສົງໄສ; ຖ້າເຈົ້າສົງໄສທັງໝົດ, ເຮົາຢ້ານວ່າເຈົ້າຈະຖືກປະຖິ້ມໄວ້ຢູ່ນອກປະຕູ. ຈົ່ງມີນິມິດທີ່ຊັດເຈນ, ຈົ່ງຍຶດໝັ້ນ, ຕິດຕາມກະແສນໍ້າແຫ່ງຊີວິດ ແລະ ຈົ່ງຕິດຕາມຢ່າງໃກ້ຊິດໃນທຸກບ່ອນທີ່ມັນໄຫຼໄປ; ເຈົ້າຕ້ອງບໍ່ມີນິໄສລັງເລໃຈໃດໆຂອງມະນຸດຢ່າງເດັດຂາດ. ຈົ່ງກິນ, ດື່ມ ແລະ ສັນລະເສີນເທົ່ານັ້ນ; ຈົ່ງສະແຫວງຫາດ້ວຍໃຈບໍລິສຸດ ແລະ ຢ່າຍອມຈຳນົນ. ຈົ່ງນຳເອົາສິ່ງທີ່ເຈົ້າບໍ່ເຂົ້າໃຈມາຢູ່ຕໍ່ໜ້າເຮົາເລື້ອຍໆ ແລະ ໃຫ້ແນ່ໃຈວ່າຈະບໍ່ມີຄວາມສົງໄສໃດໆ, ເພື່ອວ່າເຈົ້າອາດຈະໄດ້ຫຼີກເວັ້ນການທົນທຸກກັບການສູນເສຍທີ່ຍິ່ງໃຫຍ່. ນຳໃຫ້ທັນ! ນຳໃຫ້ທັນ! ຢູ່ໃກ້ໆ! ຈົ່ງກຳຈັດສິ່ງກີດຂວາງຂອງເຈົ້າ ແລະ ຢ່າຜິດສິນທຳ. ຈົ່ງອອກໄປ ແລະ ສະແຫວງຫາຢ່າງສຸດໃຈ ແລະ ຢ່າຖອຍ. ເຈົ້າຕ້ອງມອບຫົວໃຈຂອງເຈົ້າຕະຫຼອດເວລາ ແລະ ບໍ່ພາດແມ່ນແຕ່ຊ່ວງເວລາດຽວ. ພຣະວິນຍານບໍລິສຸດມີພາລະກິດໃໝ່ທີ່ຕ້ອງເຮັດຢູ່ສະເໝີ, ເຮັດສິ່ງໃໝ່ທຸກມື້ ແລະ ມີຄວາມສະຫວ່າງໃໝ່ທຸກໆວັນອີກດ້ວຍ; ການແປງຮ່າງຢູ່ເທິງພູ, ຮ່າງກາຍແຫ່ງວິນຍານ

ອັນບໍລິສຸດຂອງພຣະເຈົ້າໄດ້ປາກົດຂຶ້ນ! ດວງອາທິດແຫ່ງຄວາມຊອບທຳໃຫ້ຄວາມສະຫວ່າງ ແລະ ສ່ອງສະຫວ່າງອອກມາ; ທຸກຊາດ ແລະ ທຸກຄົນໄດ້ເຫັນໃບໜ້າອັນສະຫງ່າລາສີຂອງພຣະອົງ. ຄວາມສະຫວ່າງຂອງເຮົາຈະສ່ອງສະຫວ່າງໃຫ້ແກ່ບັນດາຜູ້ທີ່ມາຢູ່ຕໍ່ໜ້າເຮົາທັງໝົດ. ພຣະທຳຂອງເຮົາແມ່ນແສງສະຫວ່າງທີ່ນຳທາງພວກເຈົ້າໄປຂ້າງໜ້າ. ພວກເຈົ້າຈະບໍ່ຫັນຊ້າຍ ຫຼື ຂວາເມື່ອພວກເຈົ້າຍ່າງ, ແຕ່ຈະຍ່າງຢູ່ພາຍໃນແສງສະຫວ່າງຂອງເຮົາ ແລະ ການແລ່ນຂອງພວກເຈົ້າຈະບໍ່ເປັນການອອກແຮງທີ່ໄຮ້ຜົນ. ເຈົ້າຕ້ອງເຫັນພາລະກິດຂອງພຣະວິນຍານບໍລິສຸດຢ່າງຊັດເຈນ; ມີຄວາມປະສົງຂອງເຮົາຢູ່ໃນນັ້ນ. ຄວາມເລິກລັບທັງໝົດຖືກປິດບັງໄວ້, ແຕ່ພວກມັນຈະຄ່ອຍໆຖືກເປີດເຜີຍອອກມາໃຫ້ແກ່ເຈົ້າ. ຈົ່ງເກັບຮັກສາພຣະທຳຂອງເຮົາໄວ້ໃນໃຈຕະຫຼອດເວລາ ແລະ ມາຢູ່ຕໍ່ໜ້າເຮົາເພື່ອສົນທະນາກັບເຮົາຫຼາຍຂຶ້ນ. ພາລະກິດຂອງພຣະວິນຍານບໍລິສຸດກ້າວໜ້າ. ຈົ່ງຍ່າງຕາມບາດກ້າວເຮົາ; ຄວາມມະຫັດສະຈັນອັນຍິ່ງໃຫຍ່ຢູ່ທາງໜ້າ ແລະ ສິ່ງເຫຼົ່ານີ້ຈະຖືກເປີດເຜີຍອອກມາສູ່ເຈົ້າເທື່ອໜ້ອຍ. ມີພຽງຜູ້ທີ່ເອົາໃຈໃສ່, ຜູ້ທີ່ລໍຖ້າ ແລະ ຜູ້ທີ່ຕື່ນຕົວເທົ່ານັ້ນທີ່ຈະເຫັນພວກມັນ. ຈົ່ງແນ່ໃຈຢ່າໄດ້ເມີນເສີຍ. ແຜນການຄຸ້ມຄອງຂອງພຣະເຈົ້າກຳລັງເຂົ້າໃກ້ຂັ້ນຕອນສຸດທ້າຍຂອງມັນແລ້ວ; ການກໍ່ສ້າງຄຣິສຕະຈັກຈະປະສົບຜົນສຳເລັດ, ຈຳນວນຜູ້ທີ່ໄດ້ຮັບໄຊຊະນະໄດ້ຖືກກຳນົດໄວ້ແລ້ວ, ເດັກຊາຍຜູ້ທີ່ໄດ້ຮັບໄຊຊະນະຈະຖືກສ້າງຂຶ້ນ ແລະ ພວກເຂົາຈະເຂົ້າສູ່ອານາຈັກຮ່ວມກັບເຮົາ, ຮັບຕຳແໜ່ງກະສັດຮ່ວມກັບເຮົາ, ປົກຄອງທຸກຊາດດ້ວຍຄ້ອນເຫຼັກ ແລະ ຢູ່ໃນສະຫງ່າລາສີຮ່ວມກັນ!

# ບົດທີ 18

ການສ້າງຄຣິສຕະຈັກບໍ່ແມ່ນສິ່ງທີ່ຈະເຮັດໄດ້ຢ່າງງ່າຍດາຍ! ເຮົາທຸ້ມເທຫົວໃຈທັງໝົດຂອງເຮົາເຂົ້າໃນການສ້າງຄຣິສຕະຈັກ ແລະ ຊາຕານຈະເຮັດທຸກສິ່ງທີ່ມັນເຮັດໄດ້ເພື່ອທຳລາຍຄຣິສຕະຈັກນັ້ນຖິ້ມ. ຖ້າເຈົ້າຕ້ອງການຖືກສ້າງ ເຈົ້າຕ້ອງມີນິມິດ; ເຈົ້າຕ້ອງດຳລົງຊີວິດຢູ່ໂດຍເຮົາ, ເປັນພະຍານຂອງພຣະຄຣິດ, ຍົກພຣະຄຣິດຂຶ້ນສູງ ແລະ ຊື່ສັດກັບເຮົາ. ເຈົ້າບໍ່ຄວນມີຂໍ້ອ້າງ, ແຕ່ກົງກັນຂ້າມ ເຈົ້າຄວນເຊື່ອຟັງໂດຍບໍ່ມີເງື່ອນໄຂ; ເຈົ້າຕ້ອງອົດກັ້ນກັບການທົດລອງຕ່າງໆ ແລະ ຍອມຮັບທຸກສິ່ງທີ່ມາຈາກເຮົາ. ເຈົ້າຕ້ອງຕິດຕາມບໍ່ວ່າພຣະວິນຍານບໍລິສຸດຈະນຳພາເຈົ້າໄປໃສກໍຕາມ. ເຈົ້າຕ້ອງມີແນວຄິດທີ່ສະຫຼາດ ແລະ ຄວາມສາມາດທີ່ຈະແຍກແຍະສິ່ງຕ່າງໆ. ເຈົ້າຕ້ອງເຂົ້າໃຈຜູ້ຄົນ ແລະ ບໍ່ຕິດຕາມຄົນອື່ນຢ່າງຫຼັບຫູຫຼັບຕາ, ຈົ່ງຮັກສາດວງຕາຝ່າຍວິນຍານຂອງເຈົ້າໃຫ້ແຈ້ງ ແລະ ມີຄວາມຮູ້ທີ່ລະອຽດກ່ຽວກັບສິ່ງຕ່າງໆ. ຜູ້ຄົນທີ່ມີຈິດໃຈແບບດຽວກັບເຮົາຕ້ອງຢືນເປັນພະຍານໃຫ້ກັບເຮົາ ແລະ ຕໍ່ສູ້ໃນສະໜາມຮົບຢ່າງຊື່ຂາດກັບຊາຕານ. ເຈົ້າຕ້ອງຖືກສ້າງ ແລະ ຕໍ່ສູ້ໃນສະໜາມຮົບພ້ອມກັນ. ເຮົາຢູ່ທ່າມກາງພວກເຈົ້າ, ເຮົາສະໜັບສະໜູນພວກເຈົ້າ ແລະ ເຮົາເປັນບ່ອນລີ້ໄພຂອງພວກເຈົ້າ.

ສິ່ງທຳອິດທີ່ເຈົ້າຕ້ອງເຮັດຄືການຊຳລະລ້າງຕົນເອງ, ກາຍເປັນຄົນທີ່ຮັບການປ່ຽນແປງ ແລະ ມີອາລົມທີ່ທຸ່ນທ່ຽງ. ເຈົ້າຕ້ອງດຳລົງຊີວິດຢູ່ໂດຍເຮົາ ບໍ່ວ່າທັງໃນສະພາບແວດລ້ອມທີ່ດີ ແລະ ບໍ່ດີ ແລະ ບໍ່ວ່າເຈົ້າຈະຢູ່ໃນເຮືອນ ຫຼື ຢູ່ໃນສະພາບແວດລ້ອມອື່ນໆ, ເຈົ້າຕ້ອງບໍ່ລັງເລຍ້ອນຄົນອື່ນ ຫຼື ຍ້ອນເຫດການໃດໜຶ່ງ ຫຼື ບັນຫາໃດໜຶ່ງ. ເຈົ້າຕ້ອງຍຶດໝັ້ນ ແລະ ດຳລົງຊີວິດຕາມພຣະຄຣິດເປັນປົກກະຕິ ແລະ ສະແດງເຖິງພຣະເຈົ້າເອງ. ເຈົ້າຕ້ອງເຮັດໜ້າທີ່ຂອງເຈົ້າ ແລະ ປະຕິບັດໜ້າທີ່ເປັນປົກກະຕິ; ສິ່ງນີ້ບໍ່ສາມາດເຮັດໄດ້ພຽງຄັ້ງດຽວເທົ່ານັ້ນ, ແຕ່ຕ້ອງຖືກຮັກສາໄວ້. ເຈົ້າຕ້ອງເອົາໃຈເຮົາໃສ່ໃຈເຈົ້າ, ເຈດຕະນາຂອງເຮົາຕ້ອງກາຍເປັນຄວາມຄິດຂອງເຈົ້າ, ເຈົ້າຕ້ອງພິຈາລະນາສະຖານະການໂດຍລວມ, ຈົ່ງໃຫ້ພຣະຄຣິດໄຫຼອອກມາຈາກຕົວເຈົ້າ ແລະ ເຈົ້າຕ້ອງຮັບໃຊ້ຢ່າງພ້ອມພຽງກັບຄົນອື່ນໆ. ເຈົ້າຕ້ອງກ້າວເດີນໃຫ້ທັນພາລະກິດຂອງພຣະວິນຍານບໍລິສຸດ ແລະ ໂຍນຕົວເຈົ້າເອງເຂົ້າສູ່ວິທີການແຫ່ງຄວາມລອດພົ້ນຂອງພຣະວິນຍານບໍລິສຸດ. ເຈົ້າຕ້ອງເຮັດໃຫ້ຕົນເອງວ່າງເປົ່າ ແລະ ເປັນຄົນທີ່ໄຮ້ດຽງສາ ແລະ ເປີດເຜີຍ. ເຈົ້າຕ້ອງສົນທະນາ ແລະ ປະສານງານຢ່າງເປັນປົກກະຕິກັບອ້າຍເອື້ອຍນ້ອງຂອງເຈົ້າ, ສາມາດເຮັດສິ່ງຕ່າງໆດ້ວຍຈິດວິນຍານ, ຮັກເຊິ່ງກັນແລະກັນ, ຈົ່ງເອົາຄວາມເຂັ້ມແຂງຂອງພວກເຂົາມາແທນທີ່ຄວາມອ່ອນແອຂອງເຈົ້າ ແລະ ສະແຫວງຫາໃຫ້ຖືກສ້າງໃນຄຣິສຕະຈັກ. ເມື່ອນັ້ນເຈົ້າຈຶ່ງຈະມີສ່ວນຮ່ວມໃນອານາຈັກຢ່າງແທ້ຈິງ.

# ບົດທີ 19

ໃນຂະນະທີ່ພາລະກິດຂອງພຣະວິນຍານບໍລິສຸດດຳເນີນຕໍ່ໄປນັ້ນ ພຣະເຈົ້າໄດ້ນຳພາພວກເຮົາເຂົ້າສູ່ວິທີການໃໝ່ເຊີງພຣະວິນຍານບໍລິສຸດປະຕິບັດພາລະກິດອີກຄັ້ງ. ຜົນຕາມມາກໍຄື ບາງຄົນໄດ້ເຂົ້າໃຈເຮົາຜິດຢ່າງຫຼີກລ້ຽງບໍ່ໄດ້ ແລະ ໄດ້ຕຳນິເຮົາ. ບາງຄົນຕໍ່ຕ້ານ ແລະ ຄັດຄ້ານເຮົາ ແລະ ວິເຄາະເຮົາຢ່າງຖີ່ຖ້ວນ. ເຖິງຢ່າງໃດກໍຕາມ ເຮົາຍັງລໍຖ້າໃຫ້ພວກເຈົ້າກັບໃຈ ແລະ ປ່ຽນແປງຕົວເອງດ້ວຍຄວາມເມດຕາ. ການປ່ຽນແປງຫຼັກການແຫ່ງພາລະກິດຂອງພຣະວິນຍານບໍລິສຸດນັ້ນ ແມ່ນພຣະອົງເຈົ້າເອງໄດ້ປາກົດຕົວເອງຢ່າງເປີດເຜີຍ. ແຕ່ພຣະທຳຂອງເຮົາຈະຍັງຄົງບໍ່ປ່ຽນແປງ! ຍ້ອນແມ່ນເຈົ້າທີ່ເຮົາກຳລັງຊ່ວຍໃຫ້ລອດພົ້ນ, ເຮົາບໍ່ປາຖະໜາທີ່ຈະປະຖິ້ມເຈົ້າໄວ້ກາງທາງ. ພຽງແຕ່ວ່າ ພວກເຈົ້າຍັງມີຂໍ້ສົງໄສ ແລະ ຕ້ອງການກັບຄືນໄປມືເປົ່າ. ມີພວກເຈົ້າບາງຄົນໄດ້ຢຸດທີ່ຈະກ້າວໄປຂ້າງໜ້າ ໃນຂະນະທີ່ບາງຄົນກໍໄດ້ແຕ່ລໍຖ້າ ແລະ ເຝົ້າເບິ່ງ. ບາງຄົນຍັງຮັບມືກັບສະພາບການໂດຍບໍ່ມີຄວາມດົ້ນຣົນ ໃນຂະນະທີ່ບາງຄົນກໍພຽງແຕ່ລອກຮຽນແບບເທົ່ານັ້ນ. ເຈົ້າໄດ້ເຮັດໃຫ້ຫົວໃຈຂອງເຈົ້າແຂງກະດ້າງຫຼາຍ! ເຈົ້າໄດ້ຮັບເອົາສິ່ງທີ່ເຮົາໄດ້ກ່າວຕໍ່ພວກເຈົ້າ ແລະ ປ່ຽນມັນໃຫ້ກາຍເປັນສິ່ງທີ່ເຈົ້າພູມໃຈ ຫຼື ບາງສິ່ງທີ່ເຈົ້າໂອ້ອວດ. ຈົ່ງຕຶກຕອງສິ່ງນີ້ເພີ່ມເຕີມໃຫ້ດີ: ນີ້ບໍ່ແມ່ນຫຍັງ ນອກຈາກພຣະທຳແຫ່ງຄວາມເມດຕາ ແລະ ການພິພາກສາທີ່ລົງມາສູ່ເຈົ້າ. ເມື່ອເຫັນວ່າພວກເຈົ້າກະບົດແທ້ໆ ພຣະວິນຍານບໍລິສຸດກໍເລີ່ມຕົ້ນກ່າວ ແລະ ຈຳແນກໂດຍກົງ. ພວກເຈົ້າຄວນຢຳເກງ. ຢ່າປະພຶດຢ່າງເລີນເລີ້ ຫຼື ເຮັດຫຍັງກໍຕາມໂດຍບໍ່ຮອບຄອບ ແລະ ຢ່າທະນົງຕົວ, ອວດດີ ຫຼື ຫົວດື້! ພວກເຈົ້າຄວນໃສ່ໃຈກັບການນຳເອົາພຣະທຳຂອງເຮົາເຂົ້າສູ່ການປະຕິບັດໃຫ້ຫຼາຍຂຶ້ນ ແລະ ດຳລົງຊີວິດຕາມພຣະທຳເຫຼົ່ານີ້ໃນທຸກບ່ອນທີ່ເຈົ້າໄປ ເພື່ອພຣະທຳເຫຼົ່ານັ້ນຈະປ່ຽນແປງພວກເຈົ້າຈາກພາຍໃນຢ່າງແທ້ຈິງ ແລະ ເພື່ອວ່າພວກເຈົ້າຈະມີອຸປະນິໄສຂອງເຮົາ. ມີພຽງແຕ່ຜົນຕາມມາເຊັ່ນນີ້ຈຶ່ງຈະແທ້ຈິງ.

ເພື່ອໃຫ້ຄຣິດຕະຈັກຖືກສ້າງຂຶ້ນ, ເຈົ້າຕ້ອງມີວຸດທິພາວະໂດຍສະເພາະ ແລະ ສະແຫວງຫາຢ່າງເຕັມໃຈ ແລະ ຢ່າງບໍ່ຢຸດຢັ້ງ. ຍິ່ງໄປກວ່ານັ້ນ, ເຈົ້າຕ້ອງຍອມຮັບການເຜົາໄໝ້ ແລະ ການຊຳລະລ້າງຂອງພຣະວິນຍານບໍລິສຸດເພື່ອກາຍເປັນຄົນທີ່ໄດ້ຮັບການປ່ຽນແປງ. ມີພຽງພາຍໃຕ້ເງື່ອນໄຂດັ່ງກ່າວເທົ່ານັ້ນ ຄຣິດຕະຈັກຈຶ່ງສາມາດຖືກສ້າງໄດ້. ບັດນີ້ ພາລະກິດຂອງພຣະວິນຍານບໍລິສຸດໄດ້ນຳພາພວກເຈົ້າໃນການເລີ່ມຕົ້ນສ້າງຄຣິສຕະຈັກ. ຖ້າເຈົ້າສືບຕໍ່ປະພຶດໃນວິທີທີ່ສັບສົນ ແລະ ຂີ້ຄ້ານແບບເກົ່າດັ່ງທີ່ເຈົ້າໄດ້ເຄີຍເຮັດໃນອະດີດ ແລ້ວເຈົ້າກໍບໍ່ມີຫວັງເລີຍ. ເຈົ້າຕ້ອງຈັດຕຽມຕົນເອງດ້ວຍຄວາມຈິງທຸກຢ່າງ, ເຈົ້າຕ້ອງມີຄວາມສາມາດແຍກແຍະທາງດ້ານວິນຍານ ແລະ ເຈົ້າຕ້ອງເດີນໃນຫົນທາງທີ່ສົມບູນແບບຕາມສະຕິປັນຍາຂອງເຮົາ. ເພື່ອໃຫ້ຄຣິດຕະຈັກຖືກສ້າງຂຶ້ນ, ເຈົ້າຕ້ອງຢູ່ພາຍໃນວິນຍານແຫ່ງຊີວິດ ແລະ ບໍ່ແມ່ນພຽງແຕ່ຮຽນແບບຈາກພາຍນອກເທົ່ານັ້ນ. ຂະບວນການເຕີບໃຫຍ່ໃນຊີວິດຂອງເຈົ້າແມ່ນຂະບວນການດຽວກັນກັບການທີ່ເຈົ້າຖືກສ້າງຂຶ້ນ. ເຖິງຢ່າງໃດກໍຕາມ, ຈົ່ງສັງເກດວ່າຄົນທີ່ເພິ່ງພາພອນສະຫວັນ ຫຼື ຄົນທີ່ບໍ່ສາມາດເຂົ້າໃຈບັນຫາຝ່າຍວິນຍານ ຫຼື ຄົນທີ່ປາສະຈາກ

ຄວາມຈິງ ຈະບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້ ຫຼື ຄົນທີ່ບໍ່ສາມາດເຂົ້າໃກ້ເຮົາໄດ້ສະເໝີ ແລະ ສ້າງການສື່ສານກັບເຮົາໄດ້. ຜູ້ຄົນທີ່ສັບສົນລະວົນກັບຄວາມຄິດຂອງພວກເຂົາດ້ວຍແນວຄິດ ຫຼື ຄົນທີ່ດຳລົງຊີວິດດ້ວຍທິດສະດີ ແມ່ນບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້ ແລະ ຄົນທີ່ຖືກນຳພາໂດຍຄວາມຮູ້ສຶກຂອງພວກເຂົາ ກໍບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້ເຊັ່ນກັນ. ບໍ່ວ່າພຣະເຈົ້າຈະປະຕິບັດຕໍ່ເຈົ້າແນວໃດກໍຕາມ, ເຈົ້າຕ້ອງຍອມຢູ່ພາຍໃຕ້ພຣະອົງຢ່າງແທ້ຈິງ; ບໍ່ດັ່ງນັ້ນ ເຈົ້າບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້. ຄົນທີ່ໝົກໝຸ້ນຢູ່ກັບຄວາມທະນົງຕົວ, ຄວາມຄິດວ່າຕົນເອງຊອບທຳ, ຄວາມພາກພູມໃຈ ແລະ ຄວາມພໍໃຈ ແລະ ຄົນທີ່ມັກອວດເກັ່ງ ແລະ ໂອ້ອວດ ກໍບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້. ຄົນທີ່ບໍ່ສາມາດຮັບໃຊ້ຮ່ວມກັບຄົນອື່ນ ແມ່ນບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້ເຊັ່ນກັນ ແລະ ເຊັ່ນດຽວກັນກັບຄົນທີ່ບໍ່ມີຄວາມເຂົ້າໃຈທາງຝ່າຍວິນຍານ ແລະ ຕິດຕາມຄົນອື່ນນຳພາພວກເຂົາຢ່າງຫຼັບຫູຫຼັບຕາ. ເຊັ່ນດຽວກັນກັບຄົນທີ່ບໍ່ສາມາດເຂົ້າໃຈເຈດຕະນາຂອງເຮົາ ແລະ ຜູ້ທີ່ດຳລົງຊີວິດຢູ່ໃນສະພາບທີ່ຫຼ້າສະໄໝ ແມ່ນບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້ ແລະ ຄົນທີ່ຊ້າເກີນໄປທີ່ຈະນຳມັນແສງສະຫວ່າງໃໝ່ ແລະ ຄົນທີ່ບໍ່ມີນິມິດໃດເລີຍທີ່ເປັນພື້ນຖານຊີ້ນຳຂອງພວກເຂົາ ແມ່ນບໍ່ສາມາດຖືກກໍ່ສ້າງຂຶ້ນໄດ້.

ຄຣິສຕະຈັກຄວນຖືກສ້າງຂຶ້ນໂດຍໄວ; ນີ້ແມ່ນເລື່ອງທີ່ໜ້າເປັນຫ່ວງຫຼາຍສຳລັບເຮົາ. ເຈົ້າຄວນເລີ່ມຕົ້ນດ້ວຍການໃສ່ໃຈກັບຄວາມຄິດບວກ ແລະ ເຂົ້າຮ່ວມກະແສການກໍ່ສ້າງໂດຍຖວາຍຕົນເອງດ້ວຍກຳລັງຂອງເຈົ້າມີທັງໝົດ. ບໍ່ດັ່ງນັ້ນ ເຈົ້າຈະຖືກປະຕິເສດ. ເຈົ້າຄວນປະຖິ້ມສິ່ງທີ່ຄວນປະຖິ້ມທັງໝົດ; ກິນ ແລະ ດື່ມສິ່ງທີ່ຄວນກິນ ແລະ ດື່ມຢ່າງຖືກຕ້ອງ. ເຈົ້າຄວນດຳລົງຊີວິດຕາມຄວາມເປັນຈິງແຫ່ງພຣະທຳຂອງເຮົາ ແລະ ເຈົ້າຄວນຢຸດໃສ່ໃຈໃນເລື່ອງທີ່ຜິວເຜີນ ແລະ ບໍ່ສຳຄັນ. ໃຫ້ຖາມຕົນເອງດັ່ງນີ້ວ່າ ເຈົ້າໄດ້ຮັບເອົາພຣະທຳຂອງເຮົາຫຼາຍສໍ່າໃດ? ເຈົ້າດຳລົງຊີວິດຕາມພຣະທຳຂອງເຮົາຫຼາຍສໍ່າໃດ? ເຈົ້າບໍ່ຄວນສັບສົນ ແລະ ລະເວັ້ນຈາກການເຮັດສິ່ງໃດກໍຕາມຢ່າງບໍ່ຮອບຄອບ; ບໍ່ດັ່ງນັ້ນ ພຶດຕິກຳດັ່ງກ່າວມັນຈະບໍ່ຊ່ວຍເຈົ້າໃນການບັນລຸການເຕີບໂຕໃນຊີວິດ ແຕ່ຄວາມຈິງແລ້ວແມ່ນຈະທຳລາຍການເຕີບໂຕຂອງເຈົ້າ. ເຈົ້າຄວນເຂົ້າໃຈຄວາມຈິງ, ຮູ້ຈັກວິທີການນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ຍອມໃຫ້ພຣະທຳຂອງເຮົາກາຍມາເປັນຊີວິດຂອງເຈົ້າຢ່າງແທ້ຈິງ. ນີ້ແມ່ນຈຸດສຳຄັນທີ່ສຸດຂອງເລື່ອງດັ່ງກ່າວ!

ບັດນີ້ ເມື່ອການສ້າງຄຣິດຕະຈັກໄດ້ໄປເຖິງຊ່ວງເວລາທີ່ສຳຄັນ, ຊາຕານກໍວາງແຜນ ແລະ ພະຍາຍາມເຮັດຢ່າງສຸດຄວາມສາມາດເພື່ອທຳລາຍສິ່ງນັ້ນ. ພວກເຈົ້າບໍ່ຄວນປະໝາດ ແຕ່ດຳເນີນການດ້ວຍຄວາມລະມັດລະວັງ ແລະ ໃຊ້ຄວາມເຂົ້າໃຈທາງດ້ານວິນຍານ. ຫາກປາສະຈາກຄວາມເຂົ້າໃຈດັ່ງກ່າວ, ເຈົ້າຈະທົນທຸກກັບການສູນເສຍຢ່າງໃຫຍ່ຫຼວງ. ນີ້ບໍ່ແມ່ນເລື່ອງເລັກນ້ອຍ; ເຈົ້າຄວນພິຈາລະນາມັນໃຫ້ເປັນເລື່ອງທີ່ສຳຄັນຫຼາຍ. ຊາຕານສາມາດປອມແປງມາປາກົດຕົວເຊັ່ນກັນ ແລະ ລັກເລາະຂາຍເຄື່ອງປອມ ແຕ່ຄຸນນະພາບຂອງສິ່ງເຫຼົ່ານັ້ນແມ່ນແຕກຕ່າງກັນ. ຜູ້ຄົນໂງ່ຈ້າ ແລະ ປະໝາດຫຼາຍ ແລະ ບໍ່ສາມາດເຫັນຄວາມແຕກຕ່າງ. ສິ່ງນີ້ຍັງສະແດງໃຫ້ເຫັນວ່າພວກເຂົາບໍ່ສາມາດຮັກສາຄວາມຊັດເຈນ ແລະ ຄວາມສະຫງົບຕະລອດເວລາ. ຫົວໃຈຂອງພວກເຈົ້າບໍ່ຮູ້ວ່າຢູ່ໃສ. ດ້ານໜຶ່ງ, ການບໍລິການແມ່ນ

ມີກຽດສັກສີ ໃນຂະນະທີ່ອີກດ້ານໜຶ່ງກໍ່ສາມາດເປັນເສື່ອມເສຍໄດ້ເຊັ່ນກັນ. ມັນບໍ່ສາມາດນໍາໄປສູ່ການອວຍພອນ ຫຼື ຄວາມໂຊກຮ້າຍໄດ້. ຈົ່ງສະຫງົບຢູ່ຕໍ່ໜ້າເຮົາ ແລະ ດໍາລົງຊີວິດຕາມພຣະທໍາຂອງເຮົາ ແລະ ເຈົ້າຈະໄດ້ເຝົ້າລະມັດລະວັງ ແລະ ໃຊ້ຄວາມເຂົ້າໃຈທາງຈິດວິນຍານຢ່າງແນ່ນອນ. ເມື່ອຊາຕານມາເຖິງ, ເຈົ້າຈະສາມາດປ້ອງກັນຈາກມັນທັນທີ ແລະ ຮູ້ສຶກເຖິງການມາຂອງມັນ; ເຈົ້າຈະຮູ້ສຶກອຶດອັດຢ່າງແທ້ຈິງພາຍໃນຈິດວິນຍານຂອງເຈົ້າ. ພາລະກິດປັດຈຸບັນຂອງຊາຕານປັບຕົວຕາມກະແສການປ່ຽນແປງ. ເມື່ອຜູ້ຄົນປະພຶດໃນວິທີທີ່ສັບສົນ ແລະ ຂາດການຕື່ນຕົວ, ພວກເຂົາກໍຈະຍັງຄົງຢູ່ກັບການເປັນຊະເລີຍ. ເຈົ້າຄວນຕື່ນຕົວຕະລອດເວລາ ແລະ ສັງເກດເບິ່ງຢ່າງລະມັດລະວັງ. ຢ່າຜິດຖຽງກັນກ່ຽວກັບຜົນປະໂຫຍດ ແລະ ການສູນເສຍຂອງເຈົ້າເອງ ຫຼື ຄໍານວນເພື່ອເຫັນແກ່ຜົນປະໂຫຍດຂອງເຈົ້າເອງ. ກົງກັນຂ້າມ, ຈົ່ງສະແຫວງຫາເພື່ອເຮັດໃຫ້ຄວາມປະສົງຂອງເຮົາສໍາເລັດລົງ.

ວັດຖຸອາດຈະເບິ່ງຄ້າຍຄືກັນ ແຕ່ພວກມັນອາດແຕກຕ່າງກັນທາງດ້ານຄຸນນະພາບ. ດ້ວຍເຫດນີ້ເຈົ້າຄວນເຂົ້າໃຈມະນຸດ ແລະ ພ້ອມດ້ວຍວິນຍານ. ເຈົ້າຄວນໃຊ້ສະຕິປັນຍາ ແລະ ມີຄວາມເຂົ້າໃຈຢ່າງແຈ່ມແຈ້ງທາງຝ່າຍວິນຍານ. ເມື່ອພິດຂອງຊາຕານປາກົດຂຶ້ນ, ເຈົ້າກໍຄວນຈະສາມາດຮັບຮູ້ມັນທັນທີ; ມັນບໍ່ສາມາດຫຼົບໜີແສງສະຫວ່າງແຫ່ງການພິພາກສາຂອງພຣະເຈົ້າໄດ້. ເຈົ້າຄວນໃສ່ໃຈຫຼາຍຂຶ້ນໃນການຟັງສຽງຂອງພຣະວິນຍານບໍລິສຸດທີ່ຢູ່ໃນວິນຍານຂອງເຈົ້າຢ່າງໃກ້ຊິດ; ຢ່າຕິດຕາມຄົນອື່ນຢ່າງຫຼັບຫູຫຼັບຕາ ຫຼື ເຂົ້າໃຈຜິດວ່າ ສິ່ງທີ່ປອມມານັ້ນແມ່ນສິ່ງທີ່ເປັນຈິງ. ຢ່າຕິດຕາມໃຜກໍຕາມທີ່ພຽງແຕ່ນໍາພາເພື່ອເຈົ້າຈະບໍ່ໄດ້ທົນທຸກກັບການສູນເສຍ. ລົດຊາດໃດທີ່ສິ່ງທັງໝົດນີ້ຫຼົງເຫຼືອໄວ້ໃນປາກຂອງເຈົ້າ? ພວກເຈົ້າຮູ້ສຶກເຖິງຜົນຕາມມາບໍ? ເຈົ້າບໍ່ຄວນແຊກແຊງການບໍລິການໂດຍບໍ່ມີຫຼັກການ ຫຼື ປະກອບຄວາມຄິດເຫັນຂອງເຈົ້າກ່ຽວກັບມັນ ຫຼື ບໍ່ດັ່ງນັ້ນ ເຮົາຈະຕີເຈົ້າຈົນລົ້ມລົງ. ຮ້າຍແຮງໄປກວ່ານັ້ນ ຖ້າເຈົ້າປະຕິເສດທີ່ຈະຍອມອ່ອນນ້ອມ ແລະ ສືບຕໍ່ເວົ້າ ແລະ ເຮັດຕາມສິ່ງທີ່ເຈົ້າປາຖະໜາ, ແລ້ວເຮົາກໍຈະຕັດເຈົ້າອອກ! ຄຣິດຕະຈັກບໍ່ຈໍາເປັນຕ້ອງມີຄົນຢ່າງຫຼວງຫຼາຍອີກຕໍ່ໄປ; ຄຣິດຕະຈັກຕ້ອງການພຽງແຕ່ຄົນທີ່ຮັກພຣະເຈົ້າຢ່າງຈິງໃຈ ແລະ ດໍາລົງຊີວິດຕາມພຣະທໍາຂອງເຮົາຢ່າງແທ້ຈິງ. ເຈົ້າຄວນຮູ້ກ່ຽວກັບສະພາບການຕົວຈິງຂອງເຈົ້າເອງ. ມັນບໍ່ແມ່ນການຫຼອກລວງຕົນເອງບໍ ເມື່ອຄົນຍາກຈົນຄິດວ່າພວກເຂົາເປັນຄົນຮັ່ງມີ? ເພື່ອທີ່ຈະໃຫ້ຄຣິດຕະຈັກຖືກສ້າງ, ເຈົ້າຕ້ອງຕິດຕາມພຣະວິນຍານ; ຢ່າດໍາເນີນການດ້ວຍການປະພຶດຢ່າງຫຼັບຫູຫຼັບຕາ, ແຕ່ກົງກັນຂ້າມ, ຈົ່ງຢູ່ໃນທີ່ຂອງເຈົ້າ ແລະ ປະຕິບັດໜ້າທີ່ຂອງເຈົ້າເອງ. ເຈົ້າບໍ່ຄວນກ້າວອອກຈາກບົດບາດຂອງເຈົ້າ; ເຈົ້າຄວນເຮັດສຸດຄວາມສາມາດເພື່ອປະຕິບັດໜ້າທີ່ໃດກໍ່ຕາມທີ່ເຈົ້າສາມາດປະຕິບັດໄດ້ດ້ວຍກໍາລັງທີ່ເຈົ້າມີ ແລະ ແລ້ວຫົວໃຈຂອງເຮົາຈຶ່ງຈະພໍໃຈ. ບໍ່ແມ່ນວ່າ ພວກເຈົ້າທຸກຄົນຈະຮັບໃຊ້ໜ້າທີ່ດຽວກັນ. ກົງກັນຂ້າມ, ພວກເຈົ້າແຕ່ລະຄົນຄວນເຮັດບົດບາດຂອງຕົນເອງ ແລະ ອຸທິດການບໍລິການຂອງເຈົ້າໂດຍຮ່ວມມືກັບຄົນອື່ນໆໃນຄຣິດຕະຈັກ. ການບໍລິການຂອງເຈົ້າບໍ່ຄວນອອກນອກທິດນອກທາງ.

# ບົດທີ 20

ພາລະກິດຂອງພຣະວິນຍານບໍລິສຸດກຳລັງເລັ່ງໄປຂ້າງໜ້າໂດຍນຳເອົາພວກເຈົ້າໄປສູ່ອານາຈັກໃໝ່ຢ່າງສົມບູນ ເຊິ່ງເວົ້າໄດ້ວ່າ ຄວາມເປັນຈິງແຫ່ງຊີວິດຂອງອານາຈັກໄດ້ປາກົດຢູ່ຕໍ່ໜ້າພວກເຈົ້າແລ້ວ. ພຣະທຳທີ່ພຣະວິນຍານບໍລິສຸດກ່າວແມ່ນໄດ້ເປີດເຜີຍຄວາມຄິດທີ່ເລິກເຊິ່ງພາຍໃນໃຈຂອງເຈົ້າໂດຍກົງ ແລະ ກໍມີພາບປາກົດຂຶ້ນມາຕໍ່ໜ້າພວກເຈົ້າເທື່ອລະພາບ. ທຸກຄົນທີ່ຫິວ ແລະ ກະຫາຍຄວາມຊອບທຳ ແລະ ຄົນທີ່ມີເຈດຕະນາຍອມອ່ອນນ້ອມຈະຍັງຄົງຢູ່ໃນພູເຂົາຊີໂອນຢ່າງແນ່ນອນ ແລະ ຢູ່ໃນເຢຣູຊາເລັມໃໝ່; ພວກເຂົາຈະໄດ້ຮັບລັດສະໝີ ແລະ ກຽດຕິຍົດຢ່າງແນ່ນອນ ແລະ ໃນຂະນະດຽວກັນກໍ່ແບ່ງປັນພອນທີ່ງົດງາມຮ່ວມກັບເຮົາ. ປັດຈຸບັນນີ້ມີຄວາມລຶກລັບບາງຢ່າງຂອງໂລກຝ່າຍວິນຍານທີ່ພວກເຈົ້າຍັງບໍ່ທັນໄດ້ເຫັນ ເພາະວ່າດວງຕາຝ່າຍວິນຍານຂອງພວກເຈົ້າຍັງບໍ່ເປີດຂຶ້ນເທື່ອ. ທຸກສິ່ງແມ່ນມະຫັດສະຈັນ, ປະຕິຫານ ແລະ ອັດສະຈັນຢ່າງແນ່ນອນ ແລະ ສິ່ງຕ່າງໆທີ່ຜູ້ຄົນບໍ່ເຄີຍຄິດເຖິງຈະກາຍເປັນຈິງເທື່ອລະໜ້ອຍ. ພຣະເຈົ້າອົງຊົງລິດທານຸພາບສູງສຸດຈະສະແດງປະຕິຫານທີ່ຍິ່ງໃຫຍ່ທີ່ສຸດຂອງພຣະອົງ ເພື່ອວ່າ ຈັກກະວານ ແລະ ຈຸດຈົບຂອງແຜ່ນດິນໂລກ ແລະ ທຸກປະເທດ ແລະ ຜູ້ຄົນທັງໝົດຈະສາມາດເຫັນປະຕິຫານນັ້ນດ້ວຍຕາຂອງພວກເຂົາເອງ ແລະ ຍັງເຫັນວ່າສະຫງ່າລາສີ, ຄວາມຊອບທຳ ແລະ ລິດທານຸພາບສູງສຸດຂອງເຮົາຢູ່ບ່ອນໃດ. ມື້ນັ້ນກຳລັງເຂົ້າມາໃກ້ເລື້ອຍໆ! ນີ້ແມ່ນໄລຍະເວລາທີ່ສຳຄັນຫຼາຍ: ເຈົ້າຈະຖອນໂຕບໍ ຫຼື ເຈົ້າຈະພະຍາຍາມຈົນເຖິງທີ່ສຸດ, ບໍ່ມີວັນຫັນຫຼັງກັບບໍ? ຢ່າໄປເບິ່ງຄົນ, ເຫດການ ຫຼື ສິ່ງຂອງໃດໆ, ຢ່າໄປເບິ່ງໂລກ, ຜົວຂອງເຈົ້າ, ລູກຂອງເຈົ້າ ຫຼື ຄວາມສົງໄສຂອງເຈົ້າກ່ຽວກັບຊີວິດ. ໃຫ້ເບິ່ງຄວາມຮັກ ແລະ ຄວາມເມດຕາຂອງເຮົາ, ເຫັນລາຄາທີ່ເຮົາໄດ້ຈ່າຍໄປເພື່ອຮັບເອົາພວກເຈົ້າພ້ອມທັງສິ່ງທີ່ເຮົາເປັນ. ສິ່ງຕ່າງໆເຫຼົ່ານີ້ແມ່ນພຽງພໍທີ່ຈະໃຫ້ກຳລັງໃຈເຈົ້າ.

ເວລາແມ່ນໃກ້ເຂົ້າມາຫຼາຍແລ້ວ ແລະ ຄວາມປະສົງຂອງເຮົາຕ້ອງໄດ້ບັນລຸຢ່າງຮີບດ່ວນ. ເຮົາຈະບໍ່ປະຖິ້ມຜູ້ທີ່ເຮັດໃນນາມຂອງເຮົາ; ເຮົາຈະນຳເອົາພວກເຈົ້າທຸກຄົນເຂົ້າສູ່ລັດສະໝີ. ເຖິງຢ່າງໃດກໍ່ຕາມ, ເມື່ອແນມເບິ່ງຕອນນີ້, ນີ້ແມ່ນໄລຍະເວລາທີ່ສຳຄັນ; ທຸກຄົນທີ່ບໍ່ສາມາດເຮັດຕາມບາດກ້າວຕໍ່ໄປຈະຄໍ່າຄວນຕະຫຼອດຊີວິດທີ່ເຫຼືອຂອງພວກເຂົາ ແລະ ຮູ້ສຶກເສຍໃຈ, ເຖິງແມ່ນວ່າມັນຈະຊ້າເກີນໄປແລ້ວສຳລັບຄວາມຮູ້ສຶກດັ່ງກ່າວ. ໃນຕອນນີ້ ວຸດທິພາວະຂອງພວກເຈົ້າແມ່ນຖືກນຳມາທົດສອບຢ່າງແທ້ຈິງ ເພື່ອເບິ່ງວ່າ ຈະສາມາດສ້າງຄຣິສຕະຈັກໄດ້ບໍ ແລະ ເບິ່ງວ່າເຈົ້າຈະສາມາດເຊື່ອຟັງກັນ ແລະ ກັນໄດ້ ຫຼື ບໍ. ເມື່ອເບິ່ງຈາກມຸມມອງນີ້, ການເຊື່ອຟັງຂອງເຈົ້າແມ່ນເປັນຄວາມເຊື່ອຟັງທີ່ເຈົ້າໄດ້ຄັດສັນ ແລະ ເລືອກຢ່າງແນ່ນອນ; ເຖິງແມ່ນວ່າ ເຈົ້າຈະສາມາດເຊື່ອຟັງໜຶ່ງຄົນ ເຈົ້າກໍຍັງເຫັນວ່າເປັນການຍາກທີ່ຈະເຊື່ອຟັງຄົນອື່ນ. ມັນບໍ່ມີທາງຢ່າງແນ່ນອນ ທີ່ເຈົ້າຈະສາມາດເຊື່ອຟັງໄດ້ ໃນເມື່ອເຈົ້າອາໄສແນວຄວາມຄິດຂອງມະນຸດ. ຢ່າງໃດກໍຕາມ, ຄວາມຄິດຂອງພຣະເຈົ້າແມ່ນເໜືອກວ່າຄວາມຄິດຂອງມະນຸດສະເໝີ. ພຣະຄຣິດຍອມອ່ອນນ້ອມຈົນເຖິງເສຍຊີວິດ ແລະ ໄດ້ເສຍຊີວິດຢູ່ເທິງໄມ້ກາງແຂນ. ພຣະອົງບໍ່ໄດ້ເວົ້າກ່ຽວກັບເງື່ອນໄຂ ຫຼື ເຫດຜົນໃດໆ; ຕາບໃດສິ່ງນີ້ແມ່ນຄວາມປະສົງຂອງພຣະບິດາ

ຂອງພຣະອົງ, ພຣະອົງກໍຈະເຊື່ອຟັງດ້ວຍຄວາມເຕັມໃຈ. ລະດັບການເຊື່ອຟັງ ໃນປັດຈຸບັນຂອງເຈົ້າແມ່ນຈຳກັດຫຼາຍ. ເຮົາຂໍເວົ້າກັບພວກເຈົ້າທຸກຄົນວ່າ ຄວາມເຊື່ອຟັງບໍ່ແມ່ນການເຊື່ອຟັງຄົນ; ກົງກັນຂ້າມມັນໝາຍເຖິງການເຊື່ອຟັງພາລະກິດຂອງພຣະວິນຍານບໍລິສຸດ ແລະ ການເຊື່ອຟັງພຣະເຈົ້າເອງ. ພຣະທຳຂອງເຮົາແມ່ນກຳລັງຕໍ່ອາຍຸ ແລະ ປ່ຽນແປງພວກເຈົ້າຈາກພາຍໃນ ຖ້າພວກມັນບໍ່ເປັນດັ່ງນັ້ນ ແລ້ວແມ່ນໃຜຈະເຊື່ອຟັງໃຜ? ພວກເຈົ້າທຸກຄົນແມ່ນບໍ່ເຊື່ອຟັງຄົນອື່ນ. ພວກເຈົ້າຕ້ອງໃຊ້ເວລາຄຶດຄຳນວນເລື່ອງນີ້ວ່າ ຄວາມເຊື່ອຟັງແມ່ນຫຍັງ ແລະ ເຈົ້າຈະສາມາດໃຊ້ຊີວິດແຫ່ງຄວາມເຊື່ອຟັງໄດ້ແນວໃດ. ເຈົ້າຕ້ອງມາຢູ່ຕໍ່ໜ້າເຮົາໃຫ້ຫຼາຍຂຶ້ນ ແລະ ສົນທະນາເລື່ອງນີ້ ແລະ ເຈົ້າຈະເຂົ້າໃຈມັນເທື່ອລະເລັກລະໜ້ອຍດ້ວຍເຫດນັ້ນ ກໍຈະເຊົາມີແນວຄວາມຄິດ ແລະ ແນວທາງເລືອກທີ່ຢູ່ພາຍໃນເຈົ້າ. ເຮົາກະທຳສິ່ງຕ່າງໆດ້ວຍວິທີນີ້ ແມ່ນຍາກທີ່ຈະເຮັດໃຫ້ຜູ້ຄົນເຂົ້າໃຈຢ່າງລະອຽດ. ມັນບໍ່ກ່ຽວກັບວ່າຜູ້ຄົນຈະດີ ຫຼື ມີຄວາມສາມາດດ້ວຍວິທີໃດ, ເຮົາເຖິງກັບໃຊ້ຜູ້ທີ່ໂງ່ຈ້າທີ່ສຸດ ແລະ ຜູ້ທີ່ບໍ່ມີຄວາມໝາຍທີ່ສຸດ ເພື່ອເປີດເຜີຍລິດທານຸພາບສູງສຸດຂອງພຣະເຈົ້າ ໃນຂະນະດຽວກັນແມ່ນໄດ້ພິກປີ້ນແນວຄວາມຄິດ, ຄວາມເຫັນ ແລະແນວທາງເລືອກບາງຢ່າງຂອງຜູ້ຄົນ. ການກະທຳຂອງພຣະເຈົ້າແມ່ນມະຫັດສະຈັນຫຼາຍ, ການກະທຳນັ້ນແມ່ນເໜືອຄວາມສາມາດຂອງຈິດໃຈມະນຸດທີ່ຈະເຂົ້າໃຈໄດ້ຂອງຜູ້ຄົນ.

ຖ້າເຈົ້າຕ້ອງການເປັນຜູ້ໜຶ່ງທີ່ເປັນພະຍານໃຫ້ກັບເຮົາຢ່າງແທ້ຈິງ ເຈົ້າກໍຕ້ອງຮັບເອົາຄວາມຈິງຢ່າງບໍລິສຸດ ແລະ ບໍ່ມີຄວາມຜິດພາດ. ເຈົ້າຕ້ອງເອົາໃຈໃສ່ໃຫ້ຫຼາຍກວ່າເກົ່າ ໃນການເອົາພຣະທຳຂອງເຮົາໄປປະຕິບັດ ແລະ ສະແຫວງຫາເພື່ອເຮັດໃຫ້ຊີວິດຂອງເຈົ້າມີວຸດທິພາວະໃຫ້ໄວ. ຢ່າສະຄົ້ນຫາສິ່ງຕ່າງໆທີ່ບໍ່ມີຄຸນຄ່າ; ສິ່ງເຫຼົ່ານັ້ນບໍ່ມີປະໂຫຍດຫຍັງແກ່ຄວາມກ້າວໜ້າຂອງຊີວິດຂອງພວກເຈົ້າ. ເຈົ້າສາມາດຖືກສ້າງກໍຕໍ່ເມື່ອຊີວິດຂອງເຈົ້າໄດ້ມີວຸດທິພາວະເທົ່ານັ້ນ, ເມື່ອນັ້ນ ເຈົ້າຈຶ່ງສາມາດຖືກນຳເຂົ້າສູ່ອານາຈັກ, ນີ້ແມ່ນສິ່ງທີ່ບໍ່ສາມາດໂຕ້ແຍ້ງໄດ້. ເຮົາຍັງປາດຖະໜາຢາກເວົ້າເພີ່ມເຕີມກັບເຈົ້າ: ເຮົາໄດ້ໃຫ້ເຈົ້າຫຼາຍຢ່າງ ແຕ່ແທ້ຈິງແລ້ວ ເຈົ້າເຂົ້າໃຈຫຼາຍສໍ່າໃດ? ສິ່ງທີ່ເຮົາເວົ້າໄດ້ກາຍເປັນຄວາມເປັນຈິງໃນຊີວິດຂອງເຈົ້າຫຼາຍສໍ່າໃດ? ເຈົ້າດຳລົງຊີວິດຕາມສິ່ງທີ່ເຮົາເວົ້າໄດ້ຫຼາຍສໍ່າໃດ? ຈົ່ງຢ່າພະຍາຍາມຕັກນໍ້າດ້ວຍກະຕ່າທີ່ເຮັດຈາກໄມ້ໄຜ່, ທ້າຍທີ່ສຸດ ເຈົ້າຈະບໍ່ໄດ້ຫຍັງເລີຍ, ຈະມີກໍ່ແຕ່ຄວາມວ່າງເປົ່າເທົ່ານັ້ນ. ຄົນອື່ນໄດ້ຮັບປະໂຫຍດທີ່ແທ້ຈິງຢ່າງງ່າຍດາຍ; ແລ້ວເຈົ້າເດ? ເຈົ້າສາມາດເອົາຊະນະຊາຕານໄດ້ບໍ ຖ້າເຈົ້າບໍ່ມີອາວຸດ ແລະ ບໍ່ໄດ້ຖືອາວຸດ? ເຈົ້າຕ້ອງອາໄສພຣະທຳຂອງເຮົາໃຫ້ຫຼາຍຂຶ້ນໃນຊີວິດຂອງເຈົ້າ ເພາະວ່າພຣະທຳເຫຼົ່ານັ້ນແມ່ນອາວຸດທີ່ດີທີ່ສຸດສຳລັບການປ້ອງກັນໂຕ. ເຈົ້າຄວນຈົດຈຳໄວ້: ຢ່າເອົາພຣະທຳຂອງເຮົາເປັນຂອງຄອບຄອງຂອງຕົວເອງ; ຖ້າເຈົ້າບໍ່ເຂົ້າໃຈພຣະທຳເຫຼົ່ານັ້ນ, ຖ້າເຈົ້າບໍ່ສະແຫວງຫາພວກມັນ ແລະ ຖ້າເຈົ້າບໍ່ພະຍາຍາມຄຶດຄຳນວນພວກມັນ ຫຼື ສື່ສານກັບເຮົາກ່ຽວກັບພຣະທຳເຫຼົ່ານັ້ນ, ແຕ່ກົງກັນຂ້າມ ກັບພໍໃຈກັບຕົວເອງ ແລະ ມີຄວາມສຸກກັບຕົວເອງ ແລ້ວເຈົ້າຈະໄດ້ທົນທຸກກັບການສູນເສຍ. ໃນຕອນນີ້ ເຈົ້າຄວນຮຽນຮູ້ຈາກບົດຮຽນນີ້ ແລະ ເຈົ້າຕ້ອງປະຖິ້ມຕົວເອງ ແລະ ໃຊ້ຈຸດແຂງຂອງຜູ້ອື່ນເພື່ອຊົດເຊີຍຈຸດບົກຜ່ອງຂອງເຈົ້າ; ຈົ່ງຢ່າພຽງແຕ່ເຮັດໃນສິ່ງທີ່ຕົວເອງຕ້ອງການ. ເວລາບໍ່ໄດ້ຖ້າມະນຸດຄົນໃດ. ຊີວິດຂອງອ້າຍເອື້ອຍນ້ອງຂອງເຈົ້າແມ່ນກຳລັງເຕີບໃຫຍ່ຂຶ້ນ

ແຕ່ລະມື້; ພວກເຂົາທຸກຄົນກຳລັງປະສົບກັບການປ່ຽນແປງ ແລະ ຖືກຮູ້ຟື້ນຄືນໃໝ່ໃນແຕ່ລະມື້. ຈຸດແຂງຂອງອ້າຍເອື້ອຍນ້ອງຂອງເຈົ້າແມ່ນກຳລັງສູງຂຶ້ນ ແລະ ນີ້ແມ່ນສິ່ງທີ່ຍິ່ງໃຫຍ່! ຈົ່ງແລ່ນເຂົ້າສູ່ເສັ້ນໄຊ; ບໍ່ມີໃຜຈະສາມາດເບິ່ງແຍງຜູ້ໃດໄດ້. ມີແຕ່ໃຊ້ຄວາມພະຍາຍາມສ່ວນຕົວຂອງເຈົ້າເອງເພື່ອຮ່ວມມືກັບເຮົາ. ຜູ້ທີ່ມີວິໄສທັດ, ຜູ້ທີ່ມີຫົນທາງກ້າວໜ້າ, ຜູ້ທີ່ບໍ່ທໍ້ແທ້ ແລະ ຜູ້ທີ່ເບິ່ງໄປຂ້າງໜ້າຕະຫຼອດເວລາ ແມ່ນຈະເປັນຜູ້ຊະນະຢ່າງແນ່ນອນໂດຍບໍ່ຕ້ອງສົງໄສເລີຍ. ນີ້ແມ່ນໄລຍະເວລາທີ່ສຳຄັນ. ຈົ່ງຢ່າທໍ້ແທ້ ຫຼື ເສຍກຳລັງໃຈ; ເຈົ້າຕ້ອງເບິ່ງໄປຂ້າງໜ້າໃນທຸກສິ່ງ ແລະ ຈົ່ງຢ່າຫັນຫຼັງກັບ. ເຈົ້າຕ້ອງເສຍສະຫຼະທຸກຢ່າງ, ປະຖິ້ມສິ່ງກີດຂວາງທັງໝົດ ແລະ ສະແຫວງຫາຢ່າງສຸດຄວາມສາມາດຂອງເຈົ້າ. ຕາບໃດທີ່ເຈົ້າຍັງມີລົມຫາຍໃຈຢູ່ ເຈົ້າກໍຕ້ອງອົດທົນຈົນເຖິງທີ່ສຸດ; ນີ້ເປັນວິທີດຽວທີ່ເຈົ້າຈະຄູ່ຄວນໄດ້ຮັບການສັນລະເສີນ.

# ບົດທີ 21

ບັດນີ້ ພາລະກິດຂອງພຣະວິນຍານບໍລິສຸດໄດ້ນໍາພວກເຈົ້າເຂົ້າສູ່ສະຫວັນໃໝ່ ແລະ ແຜ່ນດິນໂລກໃໝ່. ທຸກສິ່ງກໍາລັງຖືກຮື້ຟື້ນຂຶ້ນໃໝ່, ທຸກສິ່ງຢູ່ໃນມືຂອງເຮົາ ແລະ ທຸກສິ່ງກໍາລັງເລີ່ມຕົ້ນໃໝ່! ດ້ວຍແນວຄິດຂອງພວກເຂົາ, ຜູ້ຄົນບໍ່ສາມາດເຂົ້າໃຈ ແລະ ສໍາລັບພວກເຂົາແລ້ວ ມັນກໍບໍ່ມີຄວາມໝາຍຫຍັງ, ແຕ່ແມ່ນເຮົາທີ່ປະຕິບັດພາລະກິດ ແລະ ສະຕິປັນຍາຂອງເຮົາກໍຢູ່ໃນພາລະກິດນັ້ນ. ສະນັ້ນ ພວກເຈົ້າຄວນໃສ່ໃຈຕົນເອງກັບການວາງແນວຄິດ ແລະ ຄວາມຄິດເຫັນທຸກຢ່າງຂອງພວກເຈົ້າລົງ, ກັບການກິນ ແລະ ດື່ມພຣະທໍາຂອງພຣະເຈົ້າດ້ວຍຄວາມອ່ອນນ້ອມ ໂດຍບໍ່ມີຄວາມສົງໄສແຕ່ຢ່າງໃດເລີຍ. ເມື່ອເຮົາປະຕິບັດພາລະກິດແບບນີ້, ເຮົາກໍາລັງແບກຮັບເອົາໜ້າທີ່ອັນສັກສິດ. ຕາມຄວາມຈິງແລ້ວ ຜູ້ຄົນບໍ່ຈໍາເປັນຕ້ອງເປັນລັກສະນະຈໍາເພາະ. ກົງກັນຂ້າມ, ແມ່ນພຣະເຈົ້າທີ່ເຮັດສິ່ງອັດສະຈັນຕ່າງໆ, ເຮັດໃຫ້ຄວາມສາມາດຮອບດ້ານຂອງພຣະອົງປະກົດແຈ້ງ. ຜູ້ຄົນບໍ່ອາດໂອ້ອວດ ນອກຈາກພວກເຂົາຈະໂອ້ອວດກ່ຽວກັບພຣະເຈົ້າ. ບໍ່ດັ່ງນັ້ນ ພວກເຂົາຈະທົນທຸກກັບການສູນເສຍ. ພຣະເຈົ້າຍົກຄົນຂັດສົນຈາກຂີ້ຝຸ່ນ ແລະ ຄົນຖ່ອມຕົນຕ້ອງຖືກເຮັດໃຫ້ສູງຂຶ້ນ. ເຮົາຈະໃຊ້ສະຕິປັນຍາຂອງເຮົາປົກຄອງຄຣິສຕະຈັກສາກົນໃນທຸກຮູບແບບ, ປົກຄອງປະຊາຊາດ ແລະ ຜູ້ຄົນທັງປວງ ເພື່ອວ່າພວກເຂົາລ້ວນແລ້ວແຕ່ຢູ່ພາຍໃນເຮົາ ແລະ ເພື່ອວ່າພວກເຈົ້າທຸກຄົນທີ່ຢູ່ໃນຄຣິສຕະຈັກຈະນອບນ້ອມຕໍ່ເຮົາ. ບັດນີ້ຄົນທີ່ບໍ່ເຊື່ອຟັງກ່ອນໜ້ານີ້ຕ້ອງເຊື່ອຟັງຕໍ່ໜ້າເຮົາ, ຕ້ອງຍອມຮັບກັນ ແລະ ກັນ, ອົດທົນຕໍ່ກັນ ແລະ ກັນ, ມີຊີວິດທີ່ຕິດຕໍ່ກັນ ແລະ ເຈົ້າຕ້ອງຮັກກັນ ແລະ ກັນ, ທຸກຄົນດຶງຈຸດແຂງຂອງຄົນອື່ນເພື່ອລົບລ້າງຈຸດອ່ອນຂອງຕົວເຈົ້າເອງ, ຮັບໃຊ້ໂດຍປະສານງານກັນ. ໃນລັກສະນະນີ້ ຄຣິສຕະຈັກຈຶ່ງສາມາດຖືກສ້າງ ແລະ ຊາຕານຈະບໍ່ມີໂອກາດຂູດຮີດໄດ້. ເມື່ອນັ້ນ ແຜນການຄຸ້ມຄອງຂອງເຮົາຈຶ່ງຈະບໍ່ລົ້ມເຫຼວ. ໃຫ້ເຮົາເອົາຄໍາເຕືອນອີກຢ່າງໃຫ້ກັບພວກເຈົ້າໃນທີ່ນີ້. ຢ່າຍອມໃຫ້ຄວາມເຂົ້າໃຈຜິດເກີດຂຶ້ນໃນເຈົ້າ ຍ້ອນຄົນແບບນັ້ນກໍເປັນວິທີການໃດໜຶ່ງ ຫຼື ປະພຶດໃນລັກສະນະນັ້ນ ໂດຍເຮັດໃຫ້ເຈົ້າເລີ່ມເສື່ອມໂຊມໃນວິນຍານ. ຕາມທີ່ເຮົາເຫັນ, ນີ້ບໍ່ແມ່ນສິ່ງທີ່ເໝາະສົມ ແລະ ມັນເປັນສິ່ງທີ່ບໍ່ມີຄ່າ. ຜູ້ທີ່ເຈົ້າເຊື່ອບໍ່ແມ່ນພຣະເຈົ້າບໍ? ນັ້ນບໍ່ແມ່ນຄົນບາງຄົນ. ໜ້າທີ່ກໍບໍ່ຄືກັນ. ມີແຕ່ຮ່າງກາຍດຽວ. ແຕ່ລະຄົນປະຕິບັດໜ້າທີ່ຂອງເຂົາ, ແຕ່ລະຄົນຢູ່ໃນທີ່ຂອງເຂົາ ແລະ ເຮັດດ້ວຍສຸດຄວາມສາມາດຂອງເຂົາ, ຍ້ອນເມັດໄຟນ້ອຍໆແຕ່ລະດວງກໍມີແສງສະຫວ່າງໜຶ່ງດວງທີ່ວາບວາວ ແລະ ສະແຫວງຫາຄວາມເຕີບໃຫຍ່ໃນຊີວິດ. ສະນັ້ນ ເຮົາຈຶ່ງຈະພໍໃຈ.

ພວກເຈົ້າຕ້ອງໃສ່ໃຈແຕ່ກັບການເຮັດໃຫ້ພວກເຈົ້າເອງງຽບສະຫງົບຢູ່ຕໍ່ໜ້າເຮົາ. ຈົ່ງຮັກສາການມີສ່ວນຮ່ວມຢ່າງໃກ້ຊິດກັບເຮົາ, ສະແຫວງຫາຫຼາຍຍິ່ງຂຶ້ນໃນສິ່ງທີ່ເຈົ້າບໍ່ເຂົ້າໃຈ, ຖວາຍຄໍາອະທິຖານ ແລະ ລໍຖ້າເວລາຂອງເຮົາ. ຈົ່ງເບິ່ງທຸກຢ່າງໆຊັດເຈນຈາກວິນຍານ. ຢ່າປະພຶດຢ່າງເລີນເລີ້ ເພື່ອປ້ອງກັນບໍ່ໃຫ້ຕົວເຈົ້າຍ່າງໄປຜິດທາງ. ມີແຕ່ໃນລັກສະນະນີ້ເທົ່ານັ້ນ ການກິນ ແລະ ດື່ມພຣະທໍາຂອງເຮົາຈຶ່ງຈະອອກໝາກຜົນຢ່າງແທ້ຈິງ. ຈົ່ງກິນ ແລະ ດື່ມພຣະທໍາຂອງເຮົາເລື້ອຍໆ, ໄຕ່ຕອງສິ່ງທີ່ເຮົາໄດ້ເວົ້າ,

ໃສ່ໃຈກັບການປະຕິບັດພຣະທຳຂອງເຮົາ ແລະ ດຳລົງຊີວິດຕາມຄວາມເປັນຈິງແຫ່ງພຣະທຳຂອງເຮົາ; ນີ້ແມ່ນບັນຫາທີ່ສຳຄັນ. ຂະບວນການໃນການສ້າງຄຣິສຕະຈັກຍັງເປັນຂະບວນການເຕີບໃຫຍ່ຂອງຊີວິດ. ຖ້າຊີວິດຂອງເຈົ້າຢຸດເຕີບໃຫຍ່, ເຈົ້າກໍບໍ່ສາມາດຖືກສ້າງໄດ້. ການເພິ່ງພາຄວາມເປັນທຳມະຊາດ, ເນື້ອໜັງ, ຄວາມກະຕືລືລົ້ນ, ການປະກອບສ່ວນ, ຄຸນວຸທິ, ບໍ່ວ່າເຈົ້າອາດຈະດີສໍ່າໃດກໍຕາມ, ຖ້າເຈົ້າເພິ່ງພາສິ່ງເຫຼົ່ານີ້ ເຈົ້າຈະບໍ່ຖືກສ້າງໄດ້. ເຈົ້າຕ້ອງດຳລົງຊີວິດພາຍໃນພຣະທຳແຫ່ງຊີວິດ, ດຳລົງຊີວິດຢູ່ພາຍໃນແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະວິນຍານບໍລິສຸດ, ຮູ້ຈັກສະຖານະການຕົວຈິງຂອງເຈົ້າ ແລະ ເປັນບຸກຄົນທີ່ໄດ້ຮັບການປ່ຽນແປງ. ເຈົ້າຕ້ອງມີຄວາມຮູ້ແບບດຽວກັນໃນວິນຍານ, ມີແສງສະຫວ່າງໃໝ່ ແລະ ສາມາດຕາມໃຫ້ທັນແສງສະຫວ່າງໃໝ່. ເຈົ້າຕ້ອງສາມາດຫຍັບເຂົ້າໃກ້ເຮົາຢ່າງບໍ່ຢຸດບໍ່ຢ່ອນ ແລະ ສື່ສານກັບເຮົາ, ສາມາດອີງການກະທຳຂອງເຈົ້າໃນຊີວິດປະຈຳວັນບົນພຣະທຳຂອງເຮົາ, ສາມາດຮັບມືກັບຄົນທຸກປະເພດ, ເຫດການ ແລະ ສິ່ງຕ່າງໆອີງຕາມພຣະທຳຂອງເຮົາຢ່າງເໝາະສົມ, ມີພຣະທຳຂອງເຮົາເປັນມາດຕະຖານຂອງເຈົ້າ ແລະ ດຳລົງຊີວິດຕາມອຸປະນິໄສຂອງເຮົາໃນກິດຈະກຳທຸກຢ່າງທີ່ຢູ່ໃນຊີວິດຂອງເຈົ້າ.

ຖ້າເຈົ້າປາຖະໜາທີ່ຈະເຂົ້າໃຈ ແລະ ເອົາໃຈໃສ່ຕໍ່ຄວາມປະສົງຂອງເຮົາ, ເຈົ້າຕ້ອງໃສ່ໃຈກັບພຣະທຳຂອງເຮົາ. ຢ່າເຮັດສິ່ງຕ່າງໆດ້ວຍຄວາມໃຈຮ້ອນ. ສິ່ງທີ່ເຮົາບໍ່ເຫັນດີນຳຈະພົບກັບຈຸດຈົບທີ່ບໍ່ດີ. ການອວຍພອນມາໃນສິ່ງທີ່ເຮົາຍົກຍ້ອງເທົ່ານັ້ນ. ຖ້າເຮົາເວົ້າ, ມັນກໍຈະເປັນແບບນັ້ນ. ຖ້າເຮົາສັ່ງ, ມັນກໍຈະຍຶດໝັ້ນ. ພວກເຈົ້າຕ້ອງບໍ່ເຮັດໃນສິ່ງທີ່ເຮົາເກືອດຫ້າມຢ່າງເດັດຂາດ ເພື່ອຫຼີກຫຼ່ຽງບໍ່ເຮັດໃຫ້ເຮົາໂກດຮ້າຍ. ຖ້າເຈົ້າເຮັດເຊັ່ນນັ້ນ, ຈະບໍ່ມີເວລາໃຫ້ເຈົ້າຮູ້ສຶກເສຍໃຈ!

# ບົດທີ 22

ການເຊື່ອໃນພຣະເຈົ້າບໍ່ແມ່ນສິ່ງທີ່ຈະເຮັດໄດ້ຢ່າງງ່າຍດາຍ. ເຈົ້າດຳເນີນຊີວິດໄປຢ່າງບໍ່ມີຈຸດໝາຍປາຍທາງ, ກິນທຸກສິ່ງ ແລະ ຄິດວ່າທຸກຢ່າງແມ່ນໜ້າສົນໃຈຫຼາຍ ແລະ ແຊບຫຼາຍ! ມີບາງຄົນທີ່ຍັງສັບສົນ ໂດຍທີ່ໃນຈິດວິນຍານຂອງພວກເຂົານັ້ນຍັງບໍ່ມີຄວາມສາມາດໃນການຕັດສິນໃຈ. ປະສົບການດັ່ງກ່າວນີ້ສົມຄວນໄດ້ຮັບຄຳອະທິບາຍຂອງພວກເຈົ້າຢ່າງລະອຽດ. ໃນຍຸກສຸດທ້າຍ, ວິນຍານທຸກປະເພດຈະອອກມາຫຼິ້ນບົດບາດຂອງພວກມັນ ໂດຍຕໍ່ຕ້ານຢ່າງເປີດເຜີຍຕໍ່ບາດກ້າວຂອງລູກຫຼານຂອງພຣະເຈົ້າ ແລະ ເຂົ້າຮ່ວມໃນການທຳລາຍການກໍ່ສ້າງຂອງຄຣິສຕະຈັກ. ຖ້າເຈົ້າຖືເບົາຕໍ່ສິ່ງນີ້ ໂດຍມອບໂອກາດໃຫ້ຊາຕານປະຕິບັດວຽກງານ, ມັນກໍຈະສ້າງຄວາມວຸ້ນວາຍໃຫ້ກັບຄຣິສຕະຈັກ, ຜູ້ຄົນຈະຕົກໃຈ ແລະ ຮູ້ສຶກໝົດຫວັງ ແລະ ໃນກໍລະນີທີ່ຮ້າຍແຮງ ຜູ້ຄົນກໍຈະສູນເສຍນິມິດ. ເມື່ອເປັນເຊັ່ນນີ້, ລາຄາທີ່ເຮົາໄດ້ຈ່າຍດ້ວຍຄວາມເຈັບປວດເປັນເວລາຫຼາຍປີນັ້ນກໍຈະສູນເສຍໄປລ້າໆ.

ເວລາຂອງການກໍ່ສ້າງຄຣິສຕະຈັກຍັງແມ່ນເວລາທີ່ປ່ວງບ້າທີ່ສຸດຂອງຊາຕານ. ຊາຕານມັກຈະກໍ່ກວນ ແລະ ລົບກວນຜ່ານສອງສາມຄົນ ແລະ ແມ່ນຜູ້ທີ່ບໍ່ຮູ້ຈັກວິນຍານ ຫຼື ຜູ້ທີ່ຫາກໍເລີ່ມມີຄວາມເຊື່ອ ທີ່ຈະຫຼິ້ນບົດບາດເປັນຊາຕານໄດ້ງ່າຍທີ່ສຸດ. ສ່ວນໃຫຍ່ກໍຍ້ອນວ່າ ຜູ້ຄົນບໍ່ເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດ, ພວກເຂົາເຮັດໃນສິ່ງຕ່າງໆຕາມລຳພັງໃຈ, ຕາມຄວາມມັກ, ຕາມວິທີການເຮັດໃນສິ່ງຕ່າງໆ ແລະ ອີງຕາມແນວຄວາມຄິດຂອງພວກເຂົາ. ຈົ່ງຢູ່ຢ່າງງຽບໆ, ນີ້ແມ່ນເພື່ອຄວາມປອດໄພຂອງເຈົ້າເອງ. ຈົ່ງຮັບຟັງ ແລະ ເຊື່ອຟັງໃຫ້ດີ. ຄຣິສຕະຈັກ ແລະ ສັງຄົມແມ່ນແຕກຕ່າງກັນ. ເຈົ້າບໍ່ສາມາດເວົ້າໃນສິ່ງທີ່ເຈົ້າມັກ ຫຼື ເວົ້າສິ່ງໃດກໍໄດ້ທີ່ເຈົ້າຄິດ. ເຮັດຢູ່ນີ້ບໍ່ໄດ້ ເພາະວ່ານີ້ຄືຄົວເຮືອນຂອງພຣະເຈົ້າ. ພຣະເຈົ້າບໍ່ຍອມຮັບເອົາວິທີທີ່ຜູ້ຄົນເຮັດໃນສິ່ງຕ່າງໆ. ເຈົ້າຕ້ອງເຮັດໃນສິ່ງຕ່າງໆໂດຍປະຕິບັດຕາມພຣະວິນຍານ, ໃຊ້ຊີວິດຢູ່ກັບພຣະທຳຂອງພຣະເຈົ້າ ແລະ ຫຼັງຈາກນັ້ນຜູ້ອື່ນຈະເຫຼື້ອມໃສເຈົ້າ. ກ່ອນອື່ນເຈົ້າຕ້ອງແກ້ໄຂຄວາມຫຍຸ້ງຍາກທັງໝົດພາຍໃນຕົວເຈົ້າໂດຍການອາໄສພຣະເຈົ້າ. ເຮັດໃຫ້ນິໄສທີ່ເສື່ອມຊາມຂອງເຈົ້າສິ້ນສຸດລົງ ແລະ ສາມາດເຂົ້າໃຈສະພາບການຂອງເຈົ້າເອງຢ່າງແທ້ຈິງ ແລະ ຮູ້ວິທີທີ່ເຈົ້າຄວນເຮັດໃນສິ່ງຕ່າງໆ; ໃຫ້ສືບຕໍ່ສົນທະນາກ່ຽວກັບສິ່ງທີ່ເຈົ້າບໍ່ເຂົ້າໃຈ. ມັນເປັນສິ່ງທີ່ຍອມຮັບບໍ່ໄດ້ ຖ້າບຸກຄົນໃດໜຶ່ງບໍ່ຮູ້ຈັກຕົນເອງ. ກ່ອນອື່ນໝົດແມ່ນໃຫ້ຮັກສາອາການເຈັບປ່ວຍຂອງຕົວເຈົ້າເອງ ດ້ວຍວິທີກິນ ແລະ ດື່ມພຣະທຳຂອງເຮົາຫຼາຍຂຶ້ນ; ຈົ່ງພິຈາລະນາພຣະທຳຂອງເຮົາ, ດຳລົງຊີວິດ ແລະ ເຮັດໃນສິ່ງຕ່າງໆຕາມພຣະທຳຂອງເຮົາ; ບໍ່ວ່າເຈົ້າຈະຢູ່ເຮືອນ ຫຼື ຢູ່ສະຖານທີ່ໃດກໍຕາມ, ເຈົ້າຄວນໃຫ້ພຣະເຈົ້າໃຊ້ອຳນາດພາຍໃນຕົວເຈົ້າ. ຈົ່ງປັດເປົ່າເນື້ອໜັງ ແລະ ຄວາມເປັນທຳມະຊາດນັ້ນອອກ. ໃຫ້ພຣະທຳຂອງພຣະເຈົ້າຄຸ້ມຄອງເຈົ້າຕະຫຼອດໄປ. ບໍ່ຈຳເປັນຕ້ອງກັງວົນວ່າຊີວິດຂອງເຈົ້າຈະບໍ່ມີການປ່ຽນແປງ; ການເວລາຈະເຮັດໃຫ້ເຈົ້າຮູ້ສຶກວ່າ ນິໄສຂອງເຈົ້າໄດ້ປ່ຽນແປງໄປຫຼາຍ. ເມື່ອກ່ອນເຈົ້າກະຕືລືລົ້ນທີ່ຈະເປັນຄົນໃນສາຍຕາຂອງສັງຄົມ, ເຈົ້າບໍ່ໄດ້ເຊື່ອຟັງຜູ້ໃດ ຫຼື ເຈົ້າມີຄວາມທະເຍີທະຍານ, ຄິດວ່າຕົວເອງເປັນຝ່າຍຖືກຕະຫຼອດ ຫຼື ເຕັມໄປດ້ວຍຄວາມພາກພູມໃຈ ແລະ

ເຈົ້າຈະຄ່ອຍໆປັດເປົ່າສິ່ງເຫຼົ່ານີ້ອອກໄປ. ຖ້າເຈົ້າປາດຖະໜາທີ່ຈະປັດເປົ່າສິ່ງເຫຼົ່ານີ້ອອກໄປໃນຕອນນີ້ ແມ່ນເປັນໄປບໍ່ໄດ້! ນີ້ກໍຍ້ອນວ່າ ຄວາມເປັນຕົວຕົນຂອງເຈົ້າແບບດັ່ງເດີມຈະບໍ່ຍອມໃຫ້ຜູ້ໃດແຕະຕ້ອງໄດ້ ຍ້ອນວ່າມັນຖືກຝັງເລິກໃນຕົວເຈົ້າແລ້ວ. ສະນັ້ນ, ເຈົ້າຕ້ອງໃຊ້ຄວາມພະຍາຍາມສ່ວນຕົວ, ເຊື່ອຟັງພາລະກິດຂອງພຣະວິນຍານບໍລິສຸດໃນທາງທີ່ດີ ແລະ ຢ່າງກະຕືລືລົ້ນ, ໃຊ້ຄວາມມຸ່ງໝາຍໃນຕົວເຈົ້າເອງ ເພື່ອຮ່ວມມືກັບພຣະເຈົ້າ ແລະ ເຕັມໃຈນຳເອົາພຣະທຳຂອງເຮົາໄປປະຕິບັດ. ຖ້າເຈົ້າເຮັດບາບ, ພຣະເຈົ້າຈະລົງວິໄນເຈົ້າ. ເມື່ອເຈົ້າກັບໃຈ ແລະ ມີຄວາມເຂົ້າໃຈ, ທຸກສິ່ງທຸກຢ່າງພາຍໃນຕົວເຈົ້າກໍຈະດີເອງ. ຖ້າເຈົ້າເວົ້າຢ່າງຕາມໃຈ, ເຈົ້າຈະຖືກລົງວິໄນພາຍໃນຕົວເຈົ້າທັນທີ. ເຈົ້າເຫັນວ່າ ພຣະເຈົ້າບໍ່ຍິນດີກັບສິ່ງແບບນັ້ນ, ສະນັ້ນ ຖ້າເຈົ້າຢຸດທັນທີ ເຈົ້າກໍຈະປະສົບກັບຄວາມສະຫງົບພາຍໃນ. ມີຜູ້ທີ່ມີຄວາມເຊື່ອໃໝ່ບາງຄົນທີ່ບໍ່ເຂົ້າໃຈວ່າ ຄວາມຮູ້ສຶກໃນຊີວິດແມ່ນຫຍັງ ຫຼື ການໃຊ້ຊີວິດຢູ່ພາຍໃນຄວາມຮູ້ສຶກເຫຼົ່ານັ້ນແມ່ນເປັນແນວໃດ. ເຖິງວ່າເຈົ້າຈະບໍ່ໄດ້ເວົ້າຫຍັງເລີຍ ແຕ່ບາງຄັ້ງເຈົ້າຈະປະຫຼາດໃຈວ່າ ເປັນຫຍັງເຈົ້າຈຶ່ງຮູ້ສຶກກະວົນກະວາຍຢູ່ພາຍໃນ? ໃນເວລາດັ່ງກ່າວນີ້, ມັນແມ່ນຄວາມຄິດ ແລະ ຈິດໃຈຂອງເຈົ້າທີ່ຜິດປົກກະຕິ. ບາງຄັ້ງເຈົ້າຈະມີທາງເລືອກຂອງເຈົ້າເອງ, ແນວຄວາມຄິດ ແລະ ຄວາມຄິດເຫັນຂອງເຈົ້າເອງ; ບາງຄັ້ງເຈົ້າຖືວ່າ ຜູ້ອື່ນຕໍ່າຕ້ອຍກວ່າເຈົ້າ; ບາງຄັ້ງເຈົ້າຕີລາຄາຕົນເອງຢ່າງເຫັນແກ່ຕົວ ແລະ ເຈົ້າບໍ່ພາວະນາ ຫຼື ກວດສອບຕົວເຈົ້າເອງ. ນີ້ແມ່ນເຫດຜົນທີ່ເຈົ້າຮູ້ສຶກກະວົນກະວາຍຢູ່ພາຍໃນ. ບາງເທື່ອເຈົ້າຮູ້ວ່າ ບັນຫາແມ່ນຫຍັງ ເຊິ່ງດ້ວຍເຫດນັ້ນ ເຈົ້າຈຶ່ງເອີ້ນຫາພຣະນາມຂອງພຣະເຈົ້າຢູ່ໃນໃຈຂອງເຈົ້າທັນທີ, ເຂົ້າໃກ້ພຣະເຈົ້າ ແລະ ເຈົ້າຈະຖືກຟື້ນຄືນ. ເມື່ອຫົວໃຈຂອງເຈົ້າມີຄວາມສັບສົນ ແລະ ກະວົນກະວາຍຫຼາຍ, ເຈົ້າຕ້ອງບໍ່ຄິດວ່າ ພຣະເຈົ້າອະນຸຍາດໃຫ້ເຈົ້າເວົ້າຢ່າງເດັດຂາດ. ໂດຍສະເພາະຜູ້ຄົນເຫຼົ່ານັ້ນ ທີ່ເປັນຜູ້ທີ່ມີຄວາມເຊື່ອໃໝ່ແມ່ນຕ້ອງເຊື່ອຟັງພຣະເຈົ້າໃຫ້ດີໃນເລື່ອງດັ່ງກ່າວນີ້. ຄວາມຮູ້ສຶກທີ່ພຣະເຈົ້າມອບໃຫ້ມະນຸດແມ່ນຄວາມສະຫງົບ, ຄວາມດີໃຈ, ຄວາມແຈ່ມແຈ້ງ ແລະ ຄວາມແນ່ນອນ. ຜູ້ຄົນມັກຈະບໍ່ເຂົ້າໃຈ ແລະ ຈະສ້າງເລື່ອງວຸ້ນວາຍ ແລະ ເຮັດສິ່ງຕ່າງໆຕາມລຳພັງໃຈ ເຊິ່ງສິ່ງເຫຼົ່ານີ້ລ້ວນແລ້ວແຕ່ແມ່ນການລົບກວນ ແລະ ເຈົ້າຕ້ອງເອົາໃຈໃສ່ກັບສິ່ງດັ່ງກ່າວນີ້ຢ່າງແທ້ຈິງ. ຖ້າເຈົ້າມີທ່າອ່ຽງຕໍ່ສະພາບການດັ່ງກ່າວນີ້, ກ່ອນອື່ນໝົດເຈົ້າກໍຄວນນຳໃຊ້ "ຢາປ້ອງກັນ" ບາງຊະນິດ ບໍ່ດັ່ງນັ້ນ ເຈົ້າກໍຈະກໍ່ກວນ ແລະ ພຣະເຈົ້າກໍຈະໂຈມຕີເຈົ້າ. ຢ່າຄິດວ່າຕົວເອງເປັນຝ່າຍຖືກສະເໝີ; ເອົາຈຸດແຂງຂອງຜູ້ອື່ນ ແລະ ນຳໃຊ້ສິ່ງເຫຼົ່ານັ້ນເພື່ອລົບລ້າງຄວາມຂາດຕົກບົກຜ່ອງຂອງຕົວເຈົ້າເອງ, ເບິ່ງວິທີຜູ້ອື່ນດຳເນີນຊີວິດຕາມພຣະທຳຂອງພຣະເຈົ້າ ແລະ ເບິ່ງວ່າຊີວິດ, ການກະທຳ ແລະ ຄຳເວົ້າຂອງພວກເຂົານັ້ນແມ່ນມີຄ່າທີ່ຈະນຳເອົາມາຮຽນແບບໄດ້ ຫຼື ບໍ່. ຖ້າເຈົ້າຖືວ່າຜູ້ອື່ນຕໍ່າຕ້ອຍກວ່າເຈົ້າ, ເຈົ້າກໍຈະເປັນຄົນທີ່ຄິດວ່າຕົນເອງທ່ຽງທຳ, ອວດດີ ແລະ ບໍ່ເປັນປະໂຫຍດໃຫ້ແກ່ຜູ້ໃດ. ປະເດັນສຳຄັນໃນຕອນນີ້ແມ່ນການສຸມໃສ່ຊີວິດ, ການກິນ ແລະ ດື່ມພຣະທຳຂອງເຮົາໃຫ້ຫຼາຍຂຶ້ນ, ສຳຜັດກັບພຣະທຳຂອງເຮົາ, ຮູ້ຈັກພຣະທຳຂອງເຮົາ, ເຮັດໃຫ້ພຣະທຳຂອງເຮົາກາຍເປັນຊີວິດຂອງເຈົ້າຢ່າງແທ້ຈິງ ເຊິ່ງນີ້ແມ່ນສິ່ງສຳຄັນ. ຊີວິດຂອງບາງຄົນທີ່ບໍ່ສາມາດດຳເນີນຊີວິດຕາມພຣະທຳຂອງພຣະເຈົ້າຈະສາມາດຈະເລີນເຕີບໂຕໄດ້ບໍ? ບໍ່ໄດ້. ເຈົ້າຕ້ອງດຳເນີນຊີວິດຕາມພຣະທຳຂອງ

ເຮົາຕະຫຼອດເວລາ. ໃນຊີວິດ, ພຣະທຳຂອງເຮົາຕ້ອງເປັນກົດເກນໃນການປະຕິບັດຂອງເຈົ້າ ເພື່ອວ່າເຈົ້າຈະຮູ້ສຶກວ່າ ການເຮັດຕາມກົດເກນດັ່ງກ່າວຄືສິ່ງທີ່ພຣະເຈົ້າມີຄວາມສຸກ ແລະ ການເຮັດສິ່ງຕ່າງໆດ້ວຍວິທີອື່ນແມ່ນສິ່ງທີ່ພຣະເຈົ້າຊັງ; ເຈົ້າຈະຄ່ອຍໆຍ່າງເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ເຈົ້າຕ້ອງເຂົ້າໃຈວ່າສິ່ງໃດທີ່ມາຈາກພຣະເຈົ້າ ແລະ ສິ່ງໃດທີ່ມາຈາກຊາຕານ. ສິ່ງຕ່າງໆທີ່ມາຈາກພຣະເຈົ້າຈະເຮັດໃຫ້ເຈົ້າມີຄວາມຊັດເຈນຫຼາຍຂຶ້ນກວ່າເກົ່າກ່ຽວກັບນິມິດ ແລະ ພວກມັນຈະເຮັດໃຫ້ເຈົ້າເຂົ້າໃກ້ພຣະເຈົ້າຫຼາຍຂຶ້ນເລື້ອຍໆ, ແບ່ງປັນຄວາມຮັກໃຫ້ກັບອ້າຍເອື້ອຍນ້ອງດ້ວຍຄວາມຈິງໃຈ; ເຈົ້າມີຄວາມສາມາດສະແດງຄວາມເຫັນໃຈຕໍ່ພາລະຂອງພຣະເຈົ້າ ແລະ ມີຫົວໃຈທີ່ຮັກພຣະເຈົ້າຢ່າງບໍ່ຈາງຫາຍ; ທາງໜ້າແມ່ນເສັ້ນທາງໃຫ້ເຈົ້າຍ່າງ. ສິ່ງຕ່າງໆທີ່ມາຈາກຊາຕານຈະເຮັດໃຫ້ເຈົ້າສູນເສຍນິມິດ ແລະ ທຸກຢ່າງທີ່ເຈົ້າມີກ່ອນໜ້ານັ້ນກໍຈະຫາຍໄປ; ເຈົ້າກາຍເປັນຄົນທີ່ຫ່າງເຫີນຈາກພຣະເຈົ້າ, ເຈົ້າບໍ່ຮັກອ້າຍເອື້ອຍນ້ອງ ແລະ ເຈົ້າມີຫົວໃຈທີ່ກຽດຊັງ. ເຈົ້າຈະໝົດຫວັງ, ເຈົ້າບໍ່ປາດຖະໜາດຳເນີນຊີວິດໃນຄຣິສຕະຈັກ ແລະ ຫົວໃຈທີ່ຮັກພຣະເຈົ້າຂອງເຈົ້າກໍຈະບໍ່ມີອີກຕໍ່ໄປ. ນີ້ແມ່ນການກະທຳຂອງຊາຕານ ແລະ ຍັງເປັນຜົນທີ່ໄດ້ຮັບມາຈາກການກະທຳຂອງວິນຍານທີ່ຊົ່ວຮ້າຍອີກດ້ວຍ.

ຕອນນີ້ແມ່ນຊ່ວງເວລາທີ່ສຳຄັນ. ເຈົ້າຕ້ອງສືບຕໍ່ເຮັດໜ້າທີ່ຈົນຮອດນາທີສຸດທ້າຍ, ລ້າງດວງຕາແຫ່ງວິນຍານຂອງເຈົ້າໃຫ້ແຈ່ມໃສ ເພື່ອເຈົ້າຈະສາມາດຈຳແນກ ລະຫວ່າງ ຄວາມດີ ແລະ ຄວາມຊົ່ວ ແລະ ໃຊ້ຄວາມພະຍາຍາມສຸດຄວາມສາມາດຂອງພວກເຈົ້າ ເພື່ອການກໍ່ສ້າງຄຣິສຕະຈັກ. ກຳຈັດລູກສະໝຸນຂອງຊາຕານ, ຜູ້ກໍ່ກວນສາສະໜາ ແລະ ການກະທຳຂອງວິນຍານທີ່ຊົ່ວຮ້າຍ. ຊຳລະລ້າງຄຣິສຕະຈັກໃຫ້ບໍລິສຸດ, ເຮັດໃຫ້ຄວາມປະສົງຂອງເຮົາຖືກດຳເນີນໄປໂດຍບໍ່ມີສິ່ງໃດກີດຂວາງ ແລະ ໃນໄລຍະເວລາອັນສັ້ນໆນີ້ ທີ່ກ່ອນຄວາມພິນາດຈະມາເຖິງ, ເຮົາຈະເຮັດໃຫ້ພວກເຈົ້າສົມບູນແບບຢ່າງແທ້ຈິງ, ຢ່າງໄວທີ່ສຸດເທົ່າທີ່ຈະໄວໄດ້ ແລະ ນຳເອົາພວກເຈົ້າເຂົ້າສູ່ຄວາມສະຫງ່າລາສີ.

# ບົດທີ 23

ເຖິງອ້າຍເອື້ອຍນ້ອງທຸກຄົນທີ່ໄດ້ຍິນສຽງຂອງເຮົາ, ພວກເຈົ້າໄດ້ຍິນສຽງແຫ່ງການພິພາກສາທີ່ຮຸນແຮງຂອງເຮົາ ແລະ ພວກເຈົ້າໄດ້ອົດທົນຕໍ່ການທົນທຸກຢ່າງຮຸນແຮງ. ເຖິງຢ່າງໃດກໍຕາມ, ພວກເຈົ້າຄວນຮູ້ວ່າ ຢູ່ເບື້ອງຫຼັງສຽງທີ່ເຂັ້ມງວດຂອງເຮົາຈະມີເຈດຕະນາທີ່ລີ້ລັບຂອງເຮົາ! ເຮົາລົງວິໄນພວກເຈົ້າເພື່ອວ່າ ພວກເຈົ້າຈະໄດ້ຮັບຄວາມລອດພົ້ນ. ພວກເຈົ້າຄວນຮູ້ວ່າ ສຳລັບລູກຊາຍອັນເປັນທີ່ຮັກຂອງເຮົາ, ເຮົາຈະລົງວິໄນພວກເຈົ້າ, ລິຮານພວກເຈົ້າ ແລະ ເຮັດໃຫ້ພວກເຈົ້າສົມບູນໃນອີກບໍ່ດົນຢ່າງແນ່ນອນ. ຫົວໃຈຂອງເຮົາຮ້ອນຮົນຫຼາຍ, ແຕ່ພວກເຈົ້າບໍ່ເຂົ້າໃຈຫົວໃຈຂອງເຮົາ ແລະ ພວກເຈົ້າບໍ່ປະພຶດຕາມພຣະທຳຂອງເຮົາ. ພຣະທຳຂອງເຮົາໃນປັດຈຸບັນໄດ້ມາເຖິງພວກເຈົ້າແລ້ວ, ເຮັດໃຫ້ພວກເຈົ້າຮູ້ຢ່າງແທ້ຈິງວ່າ ພຣະເຈົ້າແມ່ນພຣະເຈົ້າແຫ່ງຄວາມຮັກ ແລະ ເຮັດໃຫ້ພວກເຈົ້າທຸກຄົນໄດ້ຜະເຊີນກັບຄວາມຮັກທີ່ແທ້ຈິງຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ, ຍັງມີຄົນຈຳນວນໜຶ່ງທີ່ກຳລັງທຳທ່າເຮັດ. ເມື່ອພວກເຂົາເຫັນຄວາມໂສກເສົ້າຂອງຄົນອື່ນ ພວກເຂົາກໍລອກຮຽນແບບ, ເຮັດໃຫ້ຕາຂອງພວກເຂົາເຕັມໄປດ້ວຍນໍ້າຕາເຊັ່ນກັນ. ແລ້ວກໍຍັງມີຄົນອື່ນທີ່ ເບິ່ງພາຍນອກຄືກັບວ່າຕິດໜີ້ບຸນຄຸນພຣະເຈົ້າ ແລະ ພວກເຂົາ ເບິ່ງຄືກັບວ່າ ພາກັນສຳນຶກຜິດ, ແຕ່ພາຍໃນພວກເຂົາ, ພວກເຂົາບໍ່ເຂົ້າໃຈພຣະເຈົ້າຢ່າງແທ້ຈິງ, ພວກເຂົາບໍ່ໝັ້ນໃຈກ່ຽວກັບພຣະອົງເລີຍ; ກົງກັນຂ້າມ, ພວກເຂົາພຽງແຕ່ທຳທ່າເຮັດເປັນສາກບັງໜ້າເທົ່ານັ້ນ. ເຮົາກຽດຊັງຄົນເຫຼົ່ານີ້ທີ່ສຸດ! ອີກບໍ່ດົນ, ຄົນເຫຼົ່ານີ້ກໍຈະຖືກຕັດອອກຈາກນະຄອນຂອງເຮົາ. ເຈດຕະນາຂອງເຮົາກໍຄື: ເຮົາຕ້ອງການຄົນທີ່ຕ້ອງການເຮົາຢ່າງແຮງກ້າ ແລະ ມີພຽງແຕ່ຄົນທີ່ສະແຫວງຫາເຮົາດ້ວຍຫົວໃຈທີ່ແທ້ຈິງເທົ່ານັ້ນ ທີ່ຈະສາມາດເຮັດໃຫ້ເຮົາພໍໃຈໄດ້. ຄົນເຫຼົ່ານີ້ແມ່ນຜູ້ທີ່ເຮົາຈະສະໜັບສະໜູນດ້ວຍມືຂອງເຮົາເອງຢ່າງແນ່ນອນ ແລະ ເຮົາຈະຮັບປະກັນວ່າ ພວກເຂົາຈະບໍ່ປະສົບກັບໄພພິບັດຢ່າງແນ່ນອນ. ຜູ້ຄົນທີ່ຕ້ອງການພຣະເຈົ້າຢ່າງແທ້ຈິງຈະຄຳນຶງເຖິງຫົວໃຈຂອງພຣະເຈົ້າດ້ວຍຄວາມເຕັມໃຈ ແລະ ເຮັດຕາມຄວາມປະສົງຂອງເຮົາ. ສະນັ້ນ, ພວກເຈົ້າຄວນເຂົ້າສູ່ຄວາມເປັນຈິງໃນອີກບໍ່ດົນ ແລະ ຍອມຮັບພຣະທຳຂອງເຮົາໃຫ້ເປັນຊີວິດຂອງພວກເຈົ້າ, ນີ້ແມ່ນພາລະທີ່ຍິ່ງໃຫຍ່ສຸດຂອງເຮົາ. ຖ້າຄຣິດຕະຈັກ ແລະ ໄພ່ພົນທັງຫຼາຍລ້ວນແລ້ວແຕ່ເຂົ້າສູ່ຄວາມເປັນຈິງ ແລະ ລ້ວນແລ້ວແຕ່ສາມາດສົນທະນາກັບເຮົາໂດຍກົງ, ມາຢູ່ຕໍ່ໜ້າເຮົາ ແລະ ປະຕິບັດຄວາມຈິງ ແລະ ຄວາມຊອບທຳ, ເມື່ອນັ້ນ ພວກເຂົາຈຶ່ງຈະເປັນລູກຊາຍອັນເປັນທີ່ຮັກຂອງເຮົາ, ຄົນທີ່ເຮົາພໍໃຈຢ່າງຍິ່ງ. ເຮົາຈະປະທານພອນປະເສີດທັງໝົດໃຫ້ກັບຄົນເຫຼົ່ານີ້.

# ບົດທີ 24

ເວລາຫຍັບໃກ້ເຂົ້າມາຫຼາຍແລ້ວ. ຈົ່ງຕື່ນຂຶ້ນ! ໄພ່ພົນທຸກຄົນ! ເຮົາຈະກ່າວກັບພວກເຈົ້າ ແລະ ທຸກຄົນທີ່ໄດ້ຍິນຈົ່ງຕື່ນຂຶ້ນ. ເຮົາເປັນພຣະເຈົ້າທີ່ພວກເຈົ້າມີຄວາມເຊື່ອໃນໄລຍະຫຼາຍປີຜ່ານມາ. ໃນປັດຈຸບັນນີ້, ເຮົາໄດ້ກາຍມາເປັນເນື້ອໜັງ ແລະ ມາຢູ່ຕໍ່ໜ້າພວກເຈົ້າ, ສະນັ້ນຈຶ່ງເປັນການເປີດເຜີຍໃຫ້ເຫັນວ່າໃຜທີ່ຕ້ອງການເຮົາຢ່າງແທ້ຈິງ, ໃຜທີ່ເຕັມໃຈຍອມຈ່າຍລາຄາທຸກຢ່າງສຳລັບເຮົາ, ໃຜທີ່ຟັງພຣະທຳຂອງເຮົາຢ່າງແທ້ຈິງ ແລະ ໃຜທີ່ເຕັມໃຈນຳຄວາມຈິງເຂົ້າສູ່ການປະຕິບັດ. ຍ້ອນເຮົາເປັນພຣະເຈົ້າທີ່ມີລິດທານຸພາບສູງສຸດ, ເຮົາສາມາດເຫັນຄວາມລຶກລັບທຸກຢ່າງຂອງມະນຸດທີ່ລີ້ລັບໃນຄວາມມືດ, ເຮົາຮູ້ຈັກວ່າໃຜຕ້ອງການເຮົາຢ່າງແທ້ຈິງ ແລະ ເຮົາຮູ້ຈັກຜູ້ໃດທີ່ຕໍ່ຕ້ານເຮົາ; ເຮົາສັງເກດເຫັນທຸກສິ່ງ.

ບັດນີ້ ເຮົາປາຖະໜາທີ່ຈະສ້າງກຸ່ມຄົນທີ່ພໍໃຈຂອງເຮົາ ເຊິ່ງເປັນກຸ່ມຄົນທີ່ສາມາດຄຳນຶງເຖິງພາລະຂອງເຮົາໃຫ້ໄວເທົ່າທີ່ຈະໄວໄດ້. ເຖິງຢ່າງໃດກໍຕາມ, ເຮົາບໍ່ສາມາດລະເວັ້ນຈາກການເຮັດໃຫ້ຄຣິດຕະຈັກຂອງເຮົາສະອາດ ແລະ ບໍລິສຸດ; ຄຣິດຕະຈັກແມ່ນຫົວໃຈຂອງເຮົາ. ເຮົາກຽດຊັງຄົນຊົ່ວຮ້າຍທຸກຄົນທີ່ຂັດຂວາງພວກເຈົ້າຈາກການກິນ ແລະ ດື່ມພຣະທຳຂອງເຮົາ. ນີ້ກໍຍ້ອນວ່າ ມີຄົນອື່ນໆຈຳນວນໜຶ່ງທີ່ບໍ່ຕ້ອງການເຮົາຢ່າງແທ້ຈິງ. ຄົນເຫຼົ່ານີ້ເຕັມໄປດ້ວຍຄວາມຫຼອກລວງ, ພວກເຂົາບໍ່ເຂົ້າໃກ້ເຮົາດ້ວຍຫົວໃຈທີ່ແທ້ຈິງ; ພວກເຂົາຊົ່ວຮ້າຍ ແລະ ພວກເຂົາເປັນຄົນທີ່ຂັດຂວາງການປະຕິບັດຄວາມປະສົງຂອງເຮົາ; ພວກເຂົາບໍ່ແມ່ນຄົນທີ່ນຳຄວາມຈິງເຂົ້າສູ່ການປະຕິບັດ. ຜູ້ຄົນເຫຼົ່ານີ້ເຕັມໄປດ້ວຍຄວາມຄິດທີ່ວ່າ ຕົນເອງຊອບທຳ ແລະ ຄວາມອວດດີ, ພວກເຂົາທະເຍີທະຍານຢ່າງບ້າປ່ວງ, ພວກເຂົາມັກທີ່ຈະໂອ້ອວດ ແລະ ເຖິງແມ່ນວ່າຖ້ອຍຄຳທີ່ພວກເຂົາກ່າວເປັນຕາຟັງ, ລັບຫຼັງ ພວກເຂົາບໍ່ປະຕິບັດຄວາມຈິງ. ຄົນຊົ່ວຮ້າຍເຫຼົ່ານີ້ຈະຖືກຕັດອອກ ແລະ ຖືກກວາດອອກໄປ; ພວກເຂົາຈະທົນທຸກຢູ່ທ່າມກາງໄພພິບັດ. ພຣະທຳເຫຼົ່ານີ້ແມ່ນເພື່ອເຕືອນພວກເຈົ້າ ແລະ ເພື່ອຕັກເຕືອນພວກເຈົ້າໃຫ້ພວກເຈົ້າຍ່າງຢູ່ໃນເສັ້ນທາງທີ່ເຮົາພໍໃຈ. ຈົ່ງ ມີສະຕິລະວັງໂຕຢູ່ສະເໝີ, ເພາະເຮົາຮັກຄົນເຫຼົ່ານັ້ນທີ່ຮັກເຮົາຢ່າງສຸດຫົວໃຈ. ຍ້ອນວ່າ ພວກເຈົ້າຫຍັບເຂົ້າໃກ້ເຮົາ, ເຮົາຈະປົກປ້ອງພວກເຈົ້າ ແລະ ຮັກສາພວກເຈົ້າຈາກຄົນເຫຼົ່ານັ້ນທີ່ຊົ່ວຮ້າຍ; ເຮົາຈະເຮັດໃຫ້ພວກເຈົ້າໝັ້ນຄົງໃນເຮືອນຂອງເຮົາ ແລະ ເຝົ້າຮັກສາພວກເຈົ້າຈົນເຖິງທີ່ສຸດ.

# ບົດທີ 25

ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະບິດານິລັນດອນ, ເຈົ້າຊາຍແຫ່ງສັນຕິສຸກ, ພຣະເຈົ້າຂອງພວກເຮົາແມ່ນກະສັດ! ພຣະເຈົ້າອົງຊົງລິດທານຸພາບສູງສຸດວາງຕີນຂອງພຣະອົງລົງເທິງພູເຂົາໝາກກອກເທດ. ມັນຊ່າງສວຍງາມ! ຈົ່ງຟັງ! ພວກເຮົາທີ່ເປັນຜູ້ເຝົ້າຍາມໄດ້ສົ່ງສຽງຂອງພວກເຮົາດັງຂຶ້ນ; ດ້ວຍສຽງຂອງພວກເຮົາ, ພວກເຮົາຮ້ອງເພງຮ່ວມກັນ, ຍ້ອນພຣະເຈົ້າໄດ້ກັບຄືນສູ່ຊີໂອນ. ພວກເຮົາເຫັນດ້ວຍຕາຂອງພວກເຮົາເຖິງການຮົກຮ້າງຂອງເຢຣູຊາເລັມ. ຈົ່ງຮ້ອງຂຶ້ນດ້ວຍສຽງແຫ່ງຄວາມປິຕິຍິນດີ ແລະ ຮ້ອງຢ່າງພ້ອມພຽງກັນ, ຍ້ອນພຣະເຈົ້າໄດ້ນຳຄວາມສະບາຍມາໃຫ້ພວກເຮົາ ແລະ ໄດ້ໄຖ່ເຢຣູຊາເລັມ. ພຣະເຈົ້າໄດ້ເປີດແຂນອັນບໍລິສຸດຂອງພຣະອົງຕໍ່ສາຍຕາຂອງບັນດາປະຊາຊາດ, ຕົວຕົນທີ່ແທ້ຈິງຂອງພຣະເຈົ້າໄດ້ປາກົດຂຶ້ນແລ້ວ! ທຸກແຈມຸມຂອງໂລກໄດ້ເຫັນເຖິງຄວາມລອດພົ້ນຂອງພຣະເຈົ້າຂອງພວກເຮົາ.

ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພຣະວິນຍານທັງເຈັດໄດ້ອອກຈາກບັນລັງຂອງພຣະອົງໄປທົ່ວທຸກຄຣິສຕະຈັກເພື່ອເປີດເຜີຍຄວາມເລິກລັບຂອງພຣະອົງ. ເມື່ອນັ່ງເທິງບັນລັງແຫ່ງສະຫງ່າລາສີຂອງພຣະອົງ, ພຣະອົງຄຸ້ມຄອງອານາຈັກຂອງພຣະອົງ ແລະ ເຮັດໃຫ້ມັນເຂັ້ມແຂງ ແລະ ໝັ້ນຄົງດ້ວຍຄວາມຍຸຕິທຳ ແລະ ຄວາມຊອບທຳ ແລະ ພຣະອົງໄດ້ເອົາຊະນະບັນດາປະຊາຊາດຕໍ່ໜ້າພຣະອົງ. ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພຣະອົງໄດ້ແກ້ສາຍຮັດແອວຂອງກະສັດ, ພຣະອົງໄດ້ເຮັດໃຫ້ປະຕູເມືອງເປີດກວ້າງອອກຕໍ່ໜ້າພຣະອົງ, ບໍ່ອັດອີກຈັກເທື່ອ. ຍ້ອນແສງສະຫວ່າງຂອງພຣະອົງໄດ້ມາ ແລະ ສະຫງ່າລາສີຂອງພຣະອົງປາກົດຂຶ້ນ ແລະ ສ່ອງແສງດ້ວຍລັດສະໝີຂອງມັນ. ຄວາມມືດມົວປົກຄຸມແຜ່ນດິນໂລກ ແລະ ຄວາມມືດມົວທີ່ໜາທຶບປົກຄຸມເໜືອຜູ້ຄົນ. ໂອ ພຣະເຈົ້າ! ເຖິງຢ່າງໃດກໍຕາມພຣະອົງໄດ້ປາກົດ ແລະ ສ່ອງແສງສະຫວ່າງຂອງພຣະອົງໃຫ້ແກ່ພວກຂ້ານ້ອຍ ແລະ ສະຫງ່າລາສີຂອງພຣະອົງຈະປາກົດເຫັນໃນພວກຂ້ານ້ອຍ; ບັນດາປະຊາຊາດຈະມາສູ່ແສງສະຫວ່າງຂອງພຣະອົງ ແລະ ກະສັດຈະມາສູ່ລັດສະໝີຂອງພຣະອົງ. ພຣະອົງຍົກສາຍຕາຂອງພຣະອົງ ແລະ ເບິ່ງໄປອ້ອມຮອບ: ລູກຊາຍຂອງພຣະອົງເຕົ້າໂຮມກັນຕໍ່ໜ້າພຣະອົງ ແລະ ພວກເຂົາໄດ້ມາແຕ່ທາງໄກ; ລູກສາວຂອງພຣະອົງຖືກອູ້ມໃນແຂນ. ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງໄດ້ຈັບພວກຂ້ານ້ອຍໄວ້; ເປັນພຣະອົງທີ່ນຳພາພວກຂ້ານ້ອຍໄປຂ້າງໜ້າໃນຫົນທາງສູ່ອານາຈັກຂອງພຣະອົງ ແລະ ເປັນພຣະທຳອັນບໍລິສຸດຂອງພຣະອົງທີ່ຊຶມຜ່ານພວກຂ້ານ້ອຍ.

ໂອ ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພວກຂ້ານ້ອຍຂອບພຣະຄຸນພຣະອົງ ແລະ ພວກຂ້ານ້ອຍສັນລະເສີນພຣະອົງ! ໃຫ້ພວກຂ້ານ້ອຍເຊີດຊູພຣະອົງ, ເປັນພະຍານໃຫ້ແກ່ພຣະອົງ, ຍົກຍ້ອງສັນລະເສີນພຣະອົງ ແລະ ຮ້ອງຫາພຣະອົງດ້ວຍຫົວໃຈທີ່ຈິງໃຈ, ສະຫງົບ ແລະ ອຸທິດຕົນ. ໃຫ້ພວກຂ້ານ້ອຍມີພຽງຈິດໃຈດຽວກັນ ແລະ ຖືກສ້າງພ້ອມກັນ ແລະ ໃຫ້ພຣະອົງເຮັດໃຫ້ພວກຂ້ານ້ອຍກາຍເປັນຄົນທີ່ພໍໃຈພຣະອົງໃນໄວໆ, ຖືກໃຊ້ໂດຍພຣະອົງ. ປາຖະໜາໃຫ້ຄວາມປະສົງຂອງພຣະອົງຖືກປະຕິບັດ ໂດຍບໍ່ມີການຂັດຂວາງເທິງແຜ່ນດິນໂລກ!

# ບົດທີ 26

ລູກຊາຍຂອງເຮົາເອີຍ, ຈົ່ງໃສ່ໃຈໃນພຣະທຳຂອງເຮົາ, ຟັງສຽງຂອງເຮົາຢ່າງງຽບໆ ແລະ ເຮົາຈະໃຫ້ການເປີດເຜີຍແກ່ເຈົ້າ. ຈົ່ງງຽບສະຫງົບຢູ່ພາຍໃນເຮົາ ຍ້ອນເຮົາເປັນພຣະເຈົ້າຂອງເຈົ້າ ແລະ ເປັນພຣະຜູ້ໄຖ່ອົງດຽວຂອງເຈົ້າ. ພວກເຈົ້າຕ້ອງເຮັດໃຫ້ຫົວໃຈຂອງພວກເຈົ້າງຽບຢູ່ຕະຫຼອດເວລາ ແລະ ດຳລົງຊີວິດຢູ່ພາຍໃນເຮົາ; ເຮົາເປັນສີລາຂອງເຈົ້າ, ເປັນຜູ້ຄໍ້າເຈົ້າ. ຢ່າມີຄວາມຄິດອື່ນ, ແຕ່ຈົ່ງເພິ່ງພາເຮົາຢ່າງເຕັມໃຈຂອງເຈົ້າ ແລະ ເຮົາຈະປາກົດແກ່ພວກເຈົ້າຢ່າງແນ່ນອນ, ເຮົາເປັນພຣະເຈົ້າຂອງພວກເຈົ້າ! ໂອ້, ພວກຂີ້ສົງໄສເຫຼົ່ານັ້ນເອີຍ! ພວກເຂົາບໍ່ສາມາດຍຶດໝັ້ນຢ່າງແນ່ນອນ ແລະ ພວກເຂົາຈະບໍ່ໄດ້ຮັບຫຍັງເລີຍ. ເຈົ້າຕ້ອງຮູ້ວ່າໃນຕອນນີ້ແມ່ນເວລາໃດ, ມັນຊ່າງເປັນເວລາທີ່ສຳຄັນ! ມັນຊ່າງສຳຄັນ! ຢ່າວຸ້ນວາຍກັບຕົວເອງໃນສິ່ງທີ່ບໍ່ມີປະໂຫຍດ; ຫຍັບເຂົ້າມາໃກ້ເຮົາໄວໆ, ສົນທະນາກັບເຮົາ ແລະ ເຮົາຈະເປີດເຜີຍຄວາມເລິກລັບທຸກຢ່າງໃຫ້ກັບພວກເຈົ້າ.

ເຈົ້າຕ້ອງຟັງພຣະທຳແຫ່ງການຊີ້ນຳທຸກຂໍ້ຈາກພຣະວິນຍານ ແລະ ໃຫ້ນຳມາໃສ່ໃຈ. ຫຼາຍຄັ້ງ ທີ່ເຈົ້າໄດ້ຍິນພຣະທຳຂອງເຮົາ ແລະ ຫຼັງຈາກນັ້ນກໍລືມພຣະທຳເຫຼົ່ານັ້ນ. ໂອ ຜູ້ເຊິ່ງບໍ່ມີຄວາມຄິດເອີຍ! ເຈົ້າໄດ້ສູນເສຍການອວຍພອນຢ່າງຫຼວງຫຼາຍ! ບັດນີ້ ເຈົ້າຕ້ອງຟັງຢ່າງລະມັດລະວັງ ແລະ ໃສ່ໃຈກັບພຣະທຳຂອງເຮົາ, ສົນທະນາກັບເຮົາຫຼາຍຂຶ້ນ ແລະ ຫຍັບເຂົ້າໃກ້ເຮົາຫຼາຍຂຶ້ນ. ເຮົາຈະຊີ້ນຳເຈົ້າໃນທຸກສິ່ງທີ່ເຈົ້າບໍ່ເຂົ້າໃຈ ແລະ ເຮົາຈະນຳພາພວກເຈົ້າກ້າວໄປຂ້າງໜ້າ. ຢ່າຄິດແຕ່ເລື່ອງສົນທະນາກັບຄົນອື່ນຫຼາຍ. ໃນປັດຈຸບັນ ມີຫຼາຍຄົນທີ່ເທດສະໜາຕາມຕົວອັກສອນ ແລະ ທິດສະດີ ແລະ ມີໜ້ອຍຄົນເກີນໄປທີ່ມີຄວາມເປັນຈິງຂອງເຮົາຢ່າງແທ້ຈິງ. ການສົນທະນາຂອງພວກເຂົາເຮັດໃຫ້ຄົນສັບສົນ ແລະ ມຶນ ໂດຍບໍ່ຮູ້ວິທີກ້າວໜ້າ. ການຟັງພວກເຂົາ ເຮັດໃຫ້ຄົນອາດພຽງເຂົ້າໃຈກ່ຽວກັບຕົວອັກສອນ ແລະ ທິດສະດີຂຶ້ນໜ້ອຍໜຶ່ງ. ເຈົ້າຕ້ອງເຝົ້າເບິ່ງບາດກ້າວຂອງເຈົ້າ ແລະ ເຮັດໃຫ້ຫົວໃຈຂອງພວກເຈົ້າດຳລົງຊີວິດຢູ່ຕໍ່ໜ້າເຮົາສະເໝີ, ເຈົ້າຕ້ອງສື່ສານກັບເຮົາ, ຫຍັບເຂົ້າໃກ້ເຮົາ ແລະ ເຮົາຈະໃຫ້ເຈົ້າເຫັນສິ່ງທີ່ເຈົ້າບໍ່ເຂົ້າໃຈ. ໃສ່ໃຈໃນການເວົ້າຂອງເຈົ້າ, ເຝົ້າສັງເກດເບິ່ງຫົວໃຈຂອງເຈົ້າຕະຫຼອດເວລາ ແລະ ຍ່າງຕາມເສັ້ນທາງທີ່ເຮົາຍ່າງ.

ມັນຈະບໍ່ດົນອີກແລ້ວ; ຍັງເຫຼືອເວລາໜ້ອຍດຽວ. ໃຫ້ຮີບຟ້າວປະຖິ້ມທຸກສິ່ງ ຍົກເວັ້ນເຮົາ ແລະ ມາຕິດຕາມເຮົາ! ເຮົາຈະບໍ່ຂົ່ມເຫັງພວກເຈົ້າ. ຫຼາຍຄັ້ງທີ່ພວກເຈົ້າເຂົ້າໃຈຜິດກ່ຽວກັບການກະທຳຂອງເຮົາ, ແຕ່ເຈົ້າຮູ້ບໍວ່າ ເຮົາຮັກພວກເຈົ້າຫຼາຍສໍ່າໃດ? ໂອ້, ເຈົ້າພຽງແຕ່ບໍ່ເຂົ້າໃຈຫົວໃຈຂອງເຮົາ. ບໍ່ວ່າພວກເຈົ້າສົງໄສແນວໃດ, ບໍ່ວ່າພວກເຈົ້າຕິດໜີ້ເຮົາຫຼາຍສໍ່າໃດກໍຕາມ, ເຮົາກໍຈະບໍ່ຈົດຈຳມັນ ແລະ ເຖິງຢ່າງໃດກໍຕາມ ເຮົາກໍຈະເລືອກເອົາພວກເຈົ້າເພື່ອກ້າວໄປຂ້າງໜ້າ ແລະ ປະຕິບັດຕາມຄວາມປະສົງຂອງເຮົາ.

ປັດຈຸບັນບໍ່ແມ່ນເວລາທີ່ຕ້ອງຊັກຊ້າ. ຕັ້ງແຕ່ນີ້ເປັນຕົ້ນໄປ ຖ້າພວກເຈົ້າມີເຈດຕະນາອື່ນ ແລ້ວການພິພາກສາຂອງເຮົາກໍຈະເກີດຂຶ້ນກັບພວກເຈົ້າ. ຖ້າເຈົ້າປະຖິ້ມເຮົາແມ່ນແຕ່ວິນາທີດຽວ ແລ້ວເຈົ້າ

ກໍຈະກາຍເປັນຄືເມຍຂອງໂລດ. ບັດນີ້ ພາລະກິດຂອງພຣະວິນຍານບໍລິສຸດເລີ່ມໄວຂຶ້ນ ແລະ ຄົນທີ່ກ້າວບໍ່ທັນກັບແສງສະຫວ່າງໃໝ່ກໍຈະຢູ່ໃນອັນຕະລາຍ. ຄົນທີ່ບໍ່ເຝົ້າເບິ່ງຈະຖືກປະຖິ້ມ; ເຈົ້າຕ້ອງປົກປ້ອງຕົວເອງ. ເຈົ້າຮູ້ບໍ່ວ່າ ທຸກສິ່ງໃນສະພາບແວດລ້ອມອ້ອມຂ້າງເຈົ້າເກີດຂຶ້ນກໍຍ້ອນເຮົາອະນຸຍາດ, ທຸກສິ່ງແມ່ນຈັດກຽມໂດຍເຮົາ. ຈົ່ງເບິ່ງໃຫ້ຊັດເຈນ ແລະ ເຮັດໃຫ້ເຮົາພໍໃຈໃນສະພາບແວດລ້ອມທີ່ເຮົາໄດ້ມອບໃຫ້ກັບເຈົ້າ. ຢ່າຢ້ານ, ພຣະເຈົ້າອົງຊົງລິດທານຸພາບສູງສຸດແຫ່ງຈັກກະວານຈະຢູ່ກັບເຈົ້າຢ່າງແນ່ນອນ; ພຣະອົງໜູນຫຼັງພວກເຈົ້າ ແລະ ພຣະອົງເປັນແນວກຳບັງຂອງພວກເຈົ້າ. ໃນປັດຈຸບັນ ຜູ້ຄົນມີແນວຄິດຫຼາຍເກີນໄປ ເຊິ່ງເຮັດໃຫ້ເຮົາສະແດງຄວາມປະສົງຂອງເຮົາອອກຜ່ານຜູ້ຄົນທີ່ຖືກຄົນອື່ນດູຖູກ, ເພື່ອເຮັດໃຫ້ຄົນທີ່ອວດດີ, ຄົນທີ່ຄິດວ່າຕົນເອງຖືກສະເໝີ, ທະນົງຕົວ, ມັກໃຫຍ່ໄຝ່ສູງ ແລະ ມີຖານະສູງສົ່ງອັບອາຍ. ຕາບໃດທີ່ພວກເຈົ້າເອົາໃຈໃສ່ຕໍ່ພາລະຂອງເຮົາຢ່າງຈິງໃຈ ແລ້ວເຮົາກໍຈະຈັດກຽມທຸກສິ່ງໃຫ້ກັບພວກເຈົ້າ. ພຽງແຕ່ຕິດຕາມເຮົາ!

# ບົດທີ 27

ພຣະເຈົ້າທີ່ແທ້ຈິງອົງດຽວຜູ້ທີ່ປົກຄອງເໜືອຈັກກະວານ ແລະ ທຸກສິ່ງ ນັ້ນກໍຄື ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະຄຣິດແຫ່ງຍຸກສຸດທ້າຍ! ນີ້ແມ່ນຄຳພະຍານຂອງພຣະວິນຍານບໍລິສຸດ ເຊິ່ງເປັນຫຼັກຖານທີ່ບໍ່ສາມາດໂຕ້ຖຽງໄດ້! ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດເພື່ອເປັນພະຍານຢູ່ທົ່ວທຸກບ່ອນ ເພື່ອຈະບໍ່ມີໃຜມີຄວາມສົງໄສອີກ. ກະສັດຜູ້ມີໄຊຊະນະ, ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພຣະອົງໄດ້ມີໄຊຊະນະເໜືອໂລກ, ພຣະອົງໄດ້ມີໄຊເໜືອຄວາມຜິດບາບ ແລະ ພຣະອົງໄດ້ສຳເລັດການໄຖ່ບາບຂອງພຣະອົງ! ພຣະອົງໄດ້ຊ່ວຍພວກເຮົາໃຫ້ລອດພົ້ນ ນັ້ນກໍຄື ຄົນກຸ່ມນີ້ທີ່ໄດ້ຖືກເຮັດໃຫ້ເສື່ອມຊາມໂດຍຊາຕານ ແລະ ໄດ້ເຮັດໃຫ້ພວກເຮົາສົມບູນເພື່ອປະຕິບັດຕາມຄວາມປະສົງຂອງພຣະອົງ. ພຣະອົງມີອຳນາດປົກຄອງດັ່ງກະສັດທົ່ວທັງແຜ່ນດິນໂລກ, ຍຶດເອົາດິນແດນນີ້ຄືນມາ ແລະ ຂັບໄລ່ຊາຕານລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ. ພຣະອົງນັ່ງຕັດສິນໂລກ ແລະ ບໍ່ມີໃຜສາມາດໜີພົ້ນຈາກກຳມືຂອງພຣະອົງໄດ້. ພຣະອົງຂຶ້ນຄອງລາດເປັນກະສັດ.

ທົ່ວທັງແຜ່ນດິນໂລກຮ້ອງອອກມາດ້ວຍຄວາມປິຕິຍິນດີ! ສັນລະເສີນກະສັດຜູ້ມີໄຊຊະນະ ນັ້ນກໍຄື ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ຕະຫຼອດນິລັນດອນ! ພຣະອົງຄູ່ຄວນໄດ້ຮັບກຽດຕິມະສັກ ແລະ ການສັນລະເສີນ. ລິດອຳນາດ ແລະ ສະຫງ່າລາສີ ເປັນຂອງກະສັດຜູ້ຍິ່ງໃຫຍ່ແຫ່ງຈັກກະວານ!

ເວລາມັນສັ້ນ, ຈົ່ງຕິດຕາມບາດກ້າວຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ ແລະ ສືບຕໍ່ເດີນໜ້າຕໍ່ໄປ. ຈົ່ງລະມັດລະວັງຕໍ່ຄວາມຜິດພາດ, ຈົ່ງຄຳນຶງເຖິງພາລະຂອງພຣະອົງ, ຈົ່ງເປັນຈິດໜຶ່ງໃຈດຽວກັບພຣະອົງ ແລະ ເສຍສະຫຼະຕົວເຈົ້າເອງໃຫ້ກັບແຜນການຄຸ້ມຄອງຂອງພຣະອົງ. ເຈົ້າບໍ່ຕ້ອງເກັບຮັກສາຊັບສົມບັດຂອງເຈົ້າໄວ້ ເພາະວ່າ ເວລາເຫຼືອໜ້ອຍຫຼາຍແລ້ວ. ຈົ່ງຖວາຍມັນ! ຢ່າຍຶດຕິດກັບມັນ! ຈົ່ງຖວາຍມັນ! ຢ່າຍຶດຕິດກັບມັນ!

# ບົດທີ 28

ເມື່ອເຈົ້າເຫັນວ່າ ເວລານັ້ນສັ້ນຫຼາຍ ແລະ ພາລະກິດຂອງພຣະວິນຍານບໍລິສຸດກໍກ້າວໄປຂ້າງໜ້າ ເຊິ່ງເຮັດໃຫ້ເຈົ້າໄດ້ຮັບພອນອັນຍິ່ງໃຫຍ່ ແລະ ໄດ້ຮັບກະສັດແຫ່ງຈັກກະວານ, ພຣະເຈົ້າອົງຊົງລິດທານຸພາບສູງສຸດ ຜູ້ທີ່ແມ່ນດວງຕາເວັນທີ່ຮຸ່ງແຈ້ງ ແລະ ກະສັດແຫ່ງອານາຈັກ; ນີ້ແມ່ນຄວາມກະລຸນາ ແລະ ຄວາມເມດຕາທັງໝົດຂອງເຮົາ. ມັນຈະມີສິ່ງໃດອີກທີ່ສາມາດຕັດເຈົ້າອອກຈາກຄວາມຮັກຂອງເຮົາໄດ້? ຈົ່ງໄຕ່ຕອງໃຫ້ລະອຽດ, ຈົ່ງຢ່າພະຍາຍາມທີ່ຈະຫລົບໜີ, ຈົ່ງລໍຖ້າຢ່າງງຽບໆຢູ່ຕໍ່ໜ້າເຮົາໃນທຸກເວລາ ແລະ ຈົ່ງຢ່າຍ່າງເລື່ອນລອຍໄປມາຢູ່ທາງນອກຕະຫຼອດເວລາ. ໃຈຂອງເຈົ້າຕ້ອງຢູ່ໃກ້ກັບໃຈຂອງເຮົາ ແລະ ບໍ່ວ່າຫຍັງຈະເກີດຂຶ້ນ ກໍຈົ່ງຢ່າຫຼັບຫູຫຼັບຕາເຮັດສິ່ງຕ່າງໆ ຫຼື ເຮັດຕາມອຳເພີໃຈ. ເຈົ້າຕ້ອງເບິ່ງຄວາມປະສົງຂອງເຮົາ, ເຮັດທຸກສິ່ງຕາມທີ່ເຮົາຕ້ອງການ ແລະ ຈົ່ງມີຄວາມຕັ້ງໃຈທີ່ຈະປະຖິ້ມສິ່ງທີ່ເຮົາບໍ່ຕ້ອງການ. ເຈົ້າຕ້ອງບໍ່ເຮັດຕາມອາລົມຂອງຕົວເອງ ແຕ່ກົງກັນຂ້າມ ໃຫ້ປະຕິບັດຄວາມຊອບທຳຄືກັນກັບເຮົາ ໂດຍປາສະຈາກຄວາມຮູ້ສຶກອ່ອນໄຫວ ແມ່ນແຕ່ກັບພໍ່ ແລະ ແມ່ຂອງເຈົ້າກໍຕາມ. ເຈົ້າຕ້ອງປະຖິ້ມທຸກສິ່ງທີ່ບໍ່ສອດຄ່ອງກັບຄວາມຈິງ ແລະ ເຈົ້າຕ້ອງຖວາຍຕົວເອງ ແລະ ເສຍສະຫຼະເພື່ອເຮົາດ້ວຍຫົວໃຈທີ່ຮັກເຮົາຢ່າງບໍລິສຸດ. ຈົ່ງຢ່າທົນທຸກກັບການບັງຄັບຂອງຄົນ, ເຫດການ ຫຼື ວັດຖຸໃດໜຶ່ງ; ຕາບໃດທີ່ມັນສອດຄ່ອງກັບຄວາມປະສົງຂອງເຮົາ ກໍຈົ່ງປະຕິບັດມັນຕາມພຣະທຳຂອງເຮົາ. ຈົ່ງຢ່າຢ້ານກົວ ເພາະວ່າ ມືຂອງເຮົາຈະຊຸກຍູ້ເຈົ້າ ແລະ ເຮົາຈະປົກປ້ອງເຈົ້າຈາກຄົນຊົ່ວຮ້າຍທັງໝົດຢ່າງແນ່ນອນ. ເຈົ້າຄວນປົກປ້ອງຫົວໃຈຂອງຕົວເອງ ແລະ ຢູ່ພາຍໃນເຮົາຕະຫຼອດເວລາ ເນື່ອງຈາກວ່າ ຊີວິດຂອງເຈົ້າແມ່ນອາໄສຊີວິດຂອງເຮົາ; ຖ້າເຈົ້າໜີປະເຮົາ ເຈົ້າກໍຈະຫ່ຽວແຫ້ງທັນທີ.

ເຈົ້າຄວນຮູ້ວ່າ ດຽວນີ້ແມ່ນຍຸກສຸດທ້າຍ. ຊາຕານທີ່ຊົ່ວຮ້າຍ ທີ່ຄ້າຍຄືກັບສິງໂຕແຜດສຽງ ຍ່າງໄປມາ ເພື່ອຊອກຫາກິນຜູ້ຄົນ. ໂລກລະບາດທຸກປະເພດແມ່ນກຳລັງລະບາດໃນຕອນນີ້ ແລະ ຍັງມີວິນຍານຊົ່ວຮ້າຍຫຼາກຫຼາຍປະເພດ. ມີແຕ່ເຮົາເທົ່ານັ້ນຄືພຣະເຈົ້າແທ້ຈິງ; ມີແຕ່ເຮົາເທົ່ານັ້ນທີ່ເປັນບ່ອນລີ້ໄພຂອງເຈົ້າ. ຕອນນີ້ເຈົ້າສາມາດລີ້ຢູ່ໃນສະຖານທີ່ລັບຂອງເຮົາເທົ່ານັ້ນ, ຢູ່ກັບເຮົາເທົ່ານັ້ນ ແລະ ໄພພິບັດກໍຈະບໍ່ເກີດຂຶ້ນກັບເຈົ້າ ແລະ ຄວາມຫາຍະນະກໍຈະບໍ່ມາໃກ້ເຕັ້ນຂອງເຈົ້າ. ເຈົ້າຕ້ອງເຂົ້າໃກ້ເຮົາໃຫ້ຫຼາຍຂຶ້ນ, ສົນທະນາກັບເຮົາໃນສະຖານທີ່ລັບ; ຢ່າສົນທະນາກັບຄົນອື່ນຕາມອຳເພີໃຈຕົນເອງ. ເຈົ້າຕ້ອງເຂົ້າໃຈຄວາມໝາຍໃນພຣະທຳຂອງເຮົາ. ເຮົາບໍ່ໄດ້ໝາຍຄວາມວ່າ ບໍ່ໃຫ້ເຈົ້າສົນທະນາ, ພຽງແຕ່ໝາຍຄວາມວ່າ ເຈົ້າຍັງບໍ່ມີການຢັ່ງຮູ້ໃນຕອນນີ້ເທື່ອ. ໃນໄລຍະເວລານີ້, ພາລະກິດທີ່ວິນຍານຊົ່ວຮ້າຍໄດ້ເຮັດແມ່ນກຳລັງແລ່ນອາລະວາດໄປທົ່ວ. ພວກມັນສົນທະນາກັບເຈົ້າຜ່ານຜູ້ຄົນຫຼາຍປະເພດ. ຄຳເວົ້າຂອງພວກມັນຟັງມ່ວນຫູ ແຕ່ກໍມີພິດຢູ່ດ້ານໃນ. ພວກມັນແມ່ນລູກປືນທີ່ອາບດ້ວຍນໍ້າຕານ ແລະ ກ່ອນທີ່ເຈົ້າຈະຮູ້ຕົວ ພວກມັນກໍຈະຝັງພິດຂອງພວກມັນເຂົ້າໄປໃນຕົວເຈົ້າແລ້ວ. ເຈົ້າຄວນຮູ້ວ່າຄົນສ່ວນໃຫຍ່ໃນປັດຈຸບັນແມ່ນບໍ່ໝັ້ນຄົງ ເໝືອນກັບວ່າ ພວກເຂົາພວມເມົາຢູ່. ເມື່ອເຈົ້າມີຄວາມລຳບາກ ແລະ ເຈົ້າສົນທະນາກັບຜູ້ອື່ນ, ສິ່ງທີ່ພວກເຂົາບອກເຈົ້າແມ່ນພຽງແຕ່ກົດລະບຽບ ແລະ

ທິດສະດີ ແລະ ມັນກໍບໍ່ດີເທົ່າກັບການສົນທະນາກັບເຮົາໂດຍກົງ. ຈົ່ງມາຢູ່ຕໍ່ໜ້າເຮົາ ແລະ ລະບາຍສິ່ງເກົ່າໆພາຍໃນຕົວເຈົ້າອອກມາໃຫ້ໝົດ, ເປີດໃຈຂອງເຈົ້າຕໍ່ເຮົາ ແລະ ໃຈຂອງເຮົາກໍຈະຖືກເປີດເຜີຍຕໍ່ເຈົ້າຢ່າງແນ່ນອນ. ໃຈຂອງເຈົ້າຕ້ອງພາກພຽນຕໍ່ໜ້າເຮົາ. ຈົ່ງຢ່າຂີ້ຄ້ານ ແຕ່ກົງກັນຂ້າມ ເຈົ້າຕ້ອງເຂົ້າໃກ້ເຮົາຫຼາຍຂຶ້ນ; ນີ້ແມ່ນວິທີທີ່ໄວທີ່ສຸດເພື່ອໃຫ້ຊີວິດຂອງເຈົ້າເຕີບໃຫຍ່. ເຈົ້າຕ້ອງອາໄສຢູ່ພາຍໃນຕົວເຮົາ ແລະ ເຮົາຈະອາໄສຢູ່ພາຍໃນຕົວເຈົ້າ ແລະ ເຮົາຍັງຈະເປັນກະສັດພາຍໃນຕົວເຈົ້າ, ຊີ້ນຳເຈົ້າໃນທຸກສິ່ງ ແລະ ເຈົ້າຈະໄດ້ຮັບສ່ວນແບ່ງໃນອານາຈັກ.

ຈົ່ງຢ່າດູຖູກຕົວເອງ ເພາະວ່າ ເຈົ້າຍັງໜຸ່ມຢູ່; ເຈົ້າຄວນຖວາຍຕົວເອງແກ່ເຮົາ. ເຮົາບໍ່ເບິ່ງຜູ້ຄົນພຽງຜິວເຜີນແລ້ວຕັດສິນວ່າພວກເຂົາເປັນແນວໃດ ຫຼື ຕັດສິນວ່າ ອາຍຸຂອງພວກເຂົາແມ່ນເທົ່າໃດ. ເຮົາເບິ່ງພຽງແຕ່ວ່າ ພວກເຂົາຮັກເຮົາດ້ວຍຄວາມຈິງໃຈ ຫຼື ບໍ ແລະ ພວກເຂົາປະຕິບັດຕາມວິທີທາງຂອງເຮົາ ແລະ ປະຕິບັດຄວາມຈິງ ໂດຍບໍ່ຄຳນຶງເຖິງສິ່ງອື່ນໆ ຫຼື ບໍ. ຈົ່ງຢ່າກັງວົນວ່າ ມື້ອື່ນຈະເປັນແນວໃດ ຫຼື ອະນາຄົດຈະເປັນແນວໃດ. ຕາບໃດທີ່ເຈົ້າອາໄສເຮົາເພື່ອດຳລົງຊີວິດທຸກມື້ ເຮົາກໍຈະນຳພາເຈົ້າຢ່າງແນ່ນອນ. ຈົ່ງຢ່າທົນຢູ່ກັບຄວາມຄິດທີ່ວ່າ “ຊີວິດຂອງຂ້ອຍຍັງບໍ່ບັນລຸນິຕິພາວະເທື່ອ, ຂ້ອຍບໍ່ເຂົ້າໃຈຫຍັງເລີຍ” ເຊິ່ງນີ້ແມ່ນແນວຄວາມຄິດທີ່ຊາຕານສົ່ງມາໃຫ້. ພຽງແຕ່ໃຊ້ຫົວໃຈຂອງເຈົ້າເພື່ອເຂົ້າໃກ້ເຮົາຕະຫຼອດເວລາ ແລະ ຈົ່ງຕິດຕາມບາດກ້າວຂອງເຮົາຈົນຮອດຈຸດສຸດທ້າຍຂອງເສັ້ນທາງ. ເມື່ອເຈົ້າໄດ້ຍິນພຣະທຳຂອງເຮົາກ່ຽວກັບການຕຳນິ ແລະ ຕິເຕືອນ ຈົ່ງລຸກຂຶ້ນ ແລະ ແລ່ນໄປທາງໜ້າທັນທີ; ຈົ່ງຢ່າຢຸດເຂົ້າໃກ້ເຮົາ, ຈົ່ງຍ່າງນຳບາດກ້າວຂອງຝູງແກະໃຫ້ທັນ ແລະ ຈົ່ງເບິ່ງໄປທາງໜ້າ. ເມື່ອຢູ່ຕໍ່ໜ້າເຮົາ, ເຈົ້າຕ້ອງຮັກພຣະເຈົ້າຂອງເຈົ້າດ້ວຍໃຈ ແລະ ຈິດວິນຍານທັງໝົດ. ພະຍາຍາມຄິດຄຳນວນຫາພຣະທຳຂອງເຮົາກ່ຽວກັບເສັ້ນທາງຂອງການຮັບໃຊ້ໃຫ້ຫຼາຍຂຶ້ນ. ໃນການປະຕິບັດຄວາມຈິງຫົວໃຈຂອງເຈົ້າຕ້ອງບໍ່ອ່ອນແອ ແຕ່ຕ້ອງມີຈິດໃຈທີ່ເຂັ້ມແຂງ, ມີຄວາມເດັດດ່ຽວ ແລະ ຄວາມຕັ້ງໃຈຂອງເດັກຊາຍ ແລະ ມີຫົວໃຈທີ່ແຂງແຮງ. ຖ້າເຈົ້າຕ້ອງການທີ່ຈະຮັກເຮົາ ເຈົ້າກໍຕ້ອງເຮັດໃຫ້ເຮົາພໍໃຈໃນທຸກສິ່ງທີ່ເຮົາຕ້ອງການເຮັດໃຫ້ສຳເລັດໃນຕົວເຈົ້າ. ຖ້າເຈົ້າຕ້ອງການຕິດຕາມເຮົາ ເຈົ້າກໍຕ້ອງປະຖິ້ມທຸກສິ່ງທີ່ເຈົ້າມີ, ທຸກສິ່ງທີ່ເຈົ້າຮັກ, ເຈົ້າຕ້ອງເຊື່ອຟັງຢ່າງຖ່ອມຕົວເມື່ອຢູ່ຕໍ່ໜ້າເຮົາ ດ້ວຍຈິດໃຈທີ່ຊື່. ຈົ່ງຢ່າຄົ້ນຄວ້າ ຫຼື ພິຈາລະນາສິ່ງຕ່າງໆ ໂດຍລຳພັງໃຈ ແຕ່ຈົ່ງຢູ່ຄຽງຂ້າງພາລະກິດຂອງພຣະວິນຍານບໍລິສຸດສະເໝີ.

ເຮົາຂໍແນະນຳເຈົ້າດັ່ງນີ້: ເຈົ້າຕ້ອງຮັບເອົາທຸກສິ່ງທີ່ເຮົາໄດ້ໃຫ້ຄວາມສະຫວ່າງພາຍໃນຕົວເຈົ້າ ແລະ ຢ່າລືມປະຕິບັດສິ່ງດັ່ງກ່າວນັ້ນ!

# ບົດທີ 29

ເຈົ້າຮູ້ບໍວ່າ ເວລາກຳລັງບີບຮັດ? ເພາະສະນັ້ນ, ເວົ້າສັ້ນໆກໍຄື ເຈົ້າຕ້ອງອາໄສເຮົາ ແລະ ປະຖິ້ມທຸກສິ່ງທີ່ບໍ່ເຂົ້າກັບອຸປະນິໄສຂອງເຮົາຈາກຕົວເຈົ້າເຊັ່ນ: ຄວາມໂງ່ຈ້າ, ຄວາມຊັກຊ້າໃນການຕອບສະໜອງ, ຄວາມຄິດທີ່ບໍ່ຊັດເຈນ, ຄວາມໃຈອ່ອນ, ຄວາມຕັ້ງໃຈທີ່ອ່ອນແອ, ຄວາມບໍ່ມີສາລະ, ອາລົມທີ່ຕຶງຄຽດ, ຄວາມສັບສົນ ແລະ ການຂາດການຢັ່ງຮູ້. ສິ່ງເຫຼົ່ານີ້ຈະຕ້ອງຖືກປະຖິ້ມໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້. ເຮົາຄືພຣະເຈົ້າອົງຊົງລິດທານຸພາບສູງສຸດ! ຕາບໃດທີ່ເຈົ້າເຕັມໃຈທີ່ຈະຮ່ວມມືກັບເຮົາ, ເຮົາກໍສາມາດປິ່ນປົວຄວາມເຈັບປ່ວຍທັງໝົດຂອງເຈົ້າ. ເຮົາແມ່ນພຣະເຈົ້າທີ່ສາມາດເບິ່ງເຫັນເລິກເຂົ້າໄປໃນໃຈຂອງຜູ້ຄົນ; ເຮົາຮູ້ຈັກຄວາມເຈັບປ່ວຍທັງໝົດຂອງເຈົ້າ ແລະ ບ່ອນທີ່ເຈົ້າມີຂໍ້ບົກຜ່ອງ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຫ້າມບໍ່ໃຫ້ເຈົ້າມີຄວາມກ້າວໜ້າໃນຊີວິດ ແລະ ພວກມັນຕ້ອງຖືກປະຖິ້ມໃຫ້ໄວທີ່ສຸດ. ບໍ່ດັ່ງນັ້ນ, ຄວາມປະສົງຂອງເຮົາຈະບໍ່ຖືກດຳເນີນໃນຕົວເຈົ້າ. ຈົ່ງອາໄສເຮົາ ເພື່ອປະຖິ້ມທຸກສິ່ງທີ່ເປັນຂອງເຈົ້າເຊິ່ງເຮົາສ່ອງສະຫວ່າງ, ດຳລົງຊີວິດຢູ່ຄຽງຂ້າງເຮົາສະເໝີ, ຢູ່ໃກ້ຊິດເຮົາ ແລະ ດຳເນີນການກະທຳ ແລະ ພຶດຕະກຳທຸກຢ່າງດ້ວຍຄວາມຄ້າຍຄືກັນກັບເຮົາ. ການສົນທະນາກັບເຮົາຫຼາຍຂຶ້ນ ກ່ຽວກັບສິ່ງທີ່ເຈົ້າບໍ່ເຂົ້າໃຈ ແລະ ເຮົາຈະນຳພາເຈົ້າ ເພື່ອເຈົ້າຈະສາມາດກ້າວໄປທາງໜ້າໄດ້. ຖ້າເຈົ້າບໍ່ແນ່ໃຈ ກໍຈົ່ງຢ່າເຮັດຢ່າງບູມບ່າມ ແຕ່ໃຫ້ລໍຖ້າເວລາຂອງເຮົາ. ຈົ່ງຮັກສາອາລົມໃຫ້ໝັ້ນຄົງ ແລະ ຢ່າໃຫ້ອາລົມຂອງຕົວເອງປ່ຽນໄປປ່ຽນມາ; ເຈົ້າຕ້ອງມີໃຈທີ່ມີຄວາມເຄົາລົບບູຊາຕໍ່ເຮົາຕະຫຼອດເວລາ. ສິ່ງທີ່ເຈົ້າເຮັດຢູ່ຕໍ່ໜ້າເຮົາ ແລະ ນອກສາຍຕາເຮົາແມ່ນຕ້ອງເປັນໄປຕາມຄວາມປະສົງຂອງເຮົາສະເໝີ. ຈົ່ງຢ່າຜ່ອນຜັນໃຫ້ຜູ້ໃດແທນເຮົາ ບໍ່ວ່າຈະແມ່ນຜົວຂອງເຈົ້າ ຫຼື ຄອບຄົວຂອງເຈົ້າຍ້ອນວ່າ ມັນເປັນສິ່ງທີ່ຍອມຮັບບໍ່ໄດ້ ເຖິງແມ່ນວ່າ ພວກເຂົາຈະດີສໍ່າໃດກໍຕາມ. ເຈົ້າຕ້ອງດຳເນີນການໂດຍອີງໃສ່ຄວາມຈິງ. ຖ້າເຈົ້າຮັກເຮົາ, ເຮົາກໍຈະມອບພອນທີ່ຍິ່ງໃຫຍ່ໃຫ້ແກ່ເຈົ້າ. ເຮົາຈະບໍ່ອົດທົນກັບຜູ້ທີ່ຕໍ່ຕ້ານເຮົາ. ເຮົາຈະຮັກຜູ້ທີ່ເຮົາຮັກ ແລະ ຊັງຜູ້ທີ່ເຮົາຊັງ. ຈົ່ງຢ່າໄປສົນໃຈຄົນອື່ນ, ເຫດການ ຫຼື ສິ່ງຂອງໃດໜຶ່ງເລີຍ. ເບິ່ງດ້ວຍຈິດວິນຍານຂອງເຈົ້າ ແລະ ເບິ່ງຜູ້ຄົນທີ່ເຮົາໃຊ້ໃຫ້ຊັດເຈນ; ຈົ່ງຕິດຕໍ່ພົວພັນກັບຄົນຝ່າຍຈິດວິນຍານໃຫ້ຫຼາຍຂຶ້ນ. ຈົ່ງຢ່າເປັນຄົນໂງ່ຈ້າ; ເຈົ້າຕ້ອງມີຄວາມແຕກຕ່າງ. ເຂົ້າສາລີຈະເປັນເຂົ້າສາລີສະເໝີ ແລະ ເມັດຖົ່ວຈະບໍ່ມີວັນກາຍເປັນເຂົ້າສາລີໄດ້, ເຈົ້າຕ້ອງຈຳແນກຜູ້ຄົນປະເພດຕ່າງໆຂອງໃຫ້ອອກ. ເຈົ້າຕ້ອງມີຄວາມລະມັດລະວັງໃນວາຈາຂອງເຈົ້າເປັນພິເສດ ແລະ ຢືນຢູ່ເສັ້ນທາງແຫ່ງຄວາມຕັ້ງໃຈຂອງເຮົາ. ຈົ່ງຄຳນຶງເຖິງພຣະທຳເຫຼົ່ານີ້ຢ່າງຮອບຄອບ. ເຈົ້າຕ້ອງປະຖິ້ມຄວາມກະບົດຂອງເຈົ້າໃນທັນທີ ແລະ ກາຍເປັນຄົນທີ່ເໝາະກັບການນຳໃຊ້ຂອງເຮົາ ເພື່ອວ່າເຈົ້າອາດເຮັດໃຫ້ເຮົາພໍໃຈ.

# ບົດທີ 30

ຈົ່ງຕື່ນຂຶ້ນເຖີດ ອ້າຍນ້ອງເອີຍ! ຈົ່ງຕື່ນຂຶ້ນເຖີດ ເອື້ອຍນ້ອງເອີຍ! ມື້ຂອງເຮົາຈະບໍ່ຊັກຊ້າ; ເວລາຄືຊີວິດ ແລະ ການຍ້ອນເວລາກັບໄປແມ່ນການຊ່ວຍຊີວິດ! ເວລານັ້ນບໍ່ໄດ້ຢູ່ຫ່າງໄກເລີຍ! ຖ້າພວກເຈົ້າສອບເສັງເຂົ້າວິທະຍາໄລ ບໍ່ຜ່ານ ພວກເຈົ້າກໍສາມາດສຶກສາ ແລະ ເສັງຄືນໃໝ່ຫຼາຍຄັ້ງຕາມໃຈມັກ. ຢ່າງໃດກໍຕາມ, ມື້ຂອງເຮົາຈະບໍ່ຊັກຊ້າອີກຕໍ່ໄປ. ຈົ່ງຈື່ໄວ້! ຈົ່ງຈື່ໄວ້! ເຮົາຂໍຊຸກຍູ້ເຈົ້າດ້ວຍພຣະທຳທີ່ດີເຫຼົ່ານີ້. ຈຸດຈົບຂອງໂລກຈະຖືກເປີດເຜີຍຕໍ່ສາຍຕາຂອງພວກເຈົ້າ ແລະ ໄພທີ່ຮ້າຍແຮງຄືບຄານເຂົ້າມາໃກ້ຢ່າງໄວວາ. ອັນໃດສຳຄັນກວ່າກັນ: ຊີວິດຂອງພວກເຈົ້າ ຫຼື ການນອນ, ອາຫານ, ເຄື່ອງດື່ມ ແລະເຄື່ອງນຸ່ງຫົ່ມຂອງພວກເຈົ້າມີຄວາມສຳຄັນກວ່າ? ມັນເຖິງເວລາແລ້ວທີ່ພວກເຈົ້າຕ້ອງພິຈາລະນາສິ່ງເຫຼົ່ານີ້. ຈົ່ງຢ່າສົງໄສອີກຕໍ່ໄປ ແລະ ຈົ່ງຢ່າຫຼີບໜີຄວາມແນ່ນອນ!

ຈັ່ງແມ່ນເປັນຕາສົງສານແທ້ເດ! ຈັ່ງແມ່ນເປັນຕາດູຖູກແທ້ເດ! ຈັ່ງແມ່ນຕາບອດ! ມະນຸດຈັ່ງແມ່ນໂຫດຮ້າຍ! ແທ້ຈິງແລ້ວ ເຈົ້າເຮັດຕີບໍ່ໄດ້ຍິນພຣະທຳຂອງເຮົາ. ເຮົາກຳລັງເວົ້າກັບພວກເຈົ້າໂດຍບໍ່ມີປະໂຫຍດຫຍັງບໍ? ເປັນຫຍັງພວກເຈົ້າຄືຍັງເມີນເສີຍກັນຢູ່? ເປັນຫຍັງຄືເປັນແນວນັ້ນ? ພວກເຈົ້າບໍ່ເຄີຍມີຄວາມຄິດແບບນັ້ນແທ້ບໍ? ເຮົາກຳລັງເວົ້າສິ່ງເຫຼົ່ານີ້ເພື່ອໃຜ? ຈົ່ງເຊື່ອໃນຕົວເຮົາ! ເຮົາຄືພຣະຜູ້ໄຖ່ຂອງພວກເຈົ້າ! ເຮົາຄືພຣະຜູ້ຊົງລິດທານຸພາບສູງສຸດຂອງພວກເຈົ້າ! ຈົ່ງເຝົ້າເບິ່ງ! ຈົ່ງເຝົ້າເບິ່ງ! ຈົ່ງຈື່ໄວ້ວ່າເວລາທີ່ເສຍໄປຈະບໍ່ມີວັນກັບຄືນມາອີກຄັ້ງ! ບໍ່ມີຢາໃດໃນໂລກນີ້ທີ່ປິ່ນປົວຄວາມເສຍໃຈໄດ້! ສະນັ້ນແລ້ວ ເຮົາຄວນເວົ້າກັບພວກເຈົ້າແນວໃດດີ? ພຣະທຳຂອງເຮົາແມ່ນບໍ່ຄູ່ຄວນໃຫ້ພວກເຈົ້າພິຈາລະນາຢ່າງຮອບຄອບຊໍ້າໄປຊໍ້າມາເລີຍບໍ? ພວກເຈົ້າຈັ່ງແມ່ນບໍ່ສົນໃຈກັບພຣະທຳຂອງເຮົາ ແລະ ບໍ່ມີຄວາມຮັບຜິດຊອບກັບຊີວິດຂອງຕົວເອງເລີຍ; ເຮົາຈະສາມາດທົນມັນໄດ້ຈັ່ງໃດ? ເຮົາຈະເຮັດໄດ້ຈັ່ງໃດ?

ຕະຫຼອດເວລານີ້, ເປັນຫຍັງຊີວິດແຫ່ງຄຣິດຕະຈັກທີ່ຖືກຕ້ອງຈຶ່ງບໍ່ສາມາດເກີດຂຶ້ນໃນບັນດາພວກເຈົ້າໄດ້? ນັ້ນກໍເພາະວ່າ ພວກເຈົ້າຂາດຄວາມເຊື່ອ; ພວກເຈົ້າບໍ່ເຕັມໃຈຈ່າຍຮັບກຳ, ບໍ່ເຕັມໃຈຖວາຍຕົວເອງໃຫ້ແກ່ເຮົາ, ບໍ່ເຕັມໃຈເສຍສະຫຼະຕົວເອງເມື່ອຢູ່ຕໍ່ໜ້າເຮົາ. ບຸດຊາຍຂອງເຮົາເອີຍ ຈົ່ງຕື່ນຂຶ້ນເຖີດ! ຈົ່ງເຊື່ອໃນຕົວເຮົາ, ບຸດຊາຍຂອງເຮົາ! ຜູ້ເປັນທີ່ຮັກຂອງເຮົາເອີຍ, ເປັນຫຍັງເຈົ້າຈຶ່ງບໍ່ພິຈາລະນາສິ່ງທີ່ຢູ່ໃນໃຈຂອງເຮົາ?

# ບົດທີ 31

ເຮົາຮັກທຸກຄົນທີ່ຕ້ອງການເຮົາຢ່າງຈິງໃຈ. ຖ້າພວກເຈົ້າສຸມໃສ່ແຕ່ຮັກເຮົາ, ແນ່ນອນວ່າເຮົາຈະໃຫ້ພອນແກ່ພວກເຈົ້າຢ່າງມະຫາສານ. ພວກເຈົ້າເຂົ້າໃຈຄວາມຕັ້ງໃຈຂອງເຮົາບໍ? ໃນເຮືອນຂອງເຮົາ, ບໍ່ມີຄວາມແຕກຕ່າງລະຫວ່າງສະຖານະພາບສູງ ແລະ ຕໍ່າ. ທຸກຄົນແມ່ນລູກຊາຍຂອງເຮົາ ແລະ ເຮົາເປັນພຣະບິດາຂອງພວກເຈົ້າ ແລະ ເປັນພຣະເຈົ້າຂອງພວກເຈົ້າ. ເຮົາຄືຜູ້ສູງສຸດ ແລະ ເປັນເອກະລັກ. ເຮົາຄວບຄຸມຈັກກະວານ ແລະ ທຸກສິ່ງ!

ເຈົ້າຄວນ "ຮັບໃຊ້ເຮົາດ້ວຍຄວາມອ່ອນນ້ອມຖ່ອມຕົນ ແລະ ບໍ່ສະເໜີໜ້າ" ໃນເຮືອນຂອງເຮົາ. ວະລີນີ້ຄວນເຮັດໜ້າທີ່ເປັນຄະຕິປະຈຳໃຈຂອງເຈົ້າ. ຈົ່ງຢ່າເປັນໃບໄມ້ເທິງຕົ້ນໄມ້, ແຕ່ຈົ່ງເປັນຮາກຂອງຕົ້ນໄມ້ ແລະ ຢັ່ງຮາກເລິກເຂົ້າໄປໃນຊີວິດ. ຈົ່ງເຂົ້າສູ່ປະສົບການທີ່ແທ້ຈິງຂອງຊີວິດ, ດຳລົງຊີວິດຕາມພຣະທຳຂອງເຮົາ, ສະແຫວງຫາເຮົາຫຼາຍຂຶ້ນໃນທຸກອະລິຍະບົດ, ຫຍັບເຂົ້າໃກ້ເຮົາ ແລະ ສົນທະນາກັບເຮົາ. ບໍ່ຕ້ອງໃສ່ໃຈກັບສິ່ງທີ່ຢູ່ພາຍນອກ ແລະ ບໍ່ຕ້ອງໃຫ້ບຸກຄົນໃດ, ເຫດການ ຫຼື ສິ່ງໃດຄວບຄຸມແຕ່ຈົ່ງສົນທະນາກັບຜູ້ຄົນທາງວິນຍານກ່ຽວກັບສິ່ງທີ່ເຮົາເປັນເທົ່ານັ້ນ. ຈົ່ງເຂົ້າໃຈໃນຄວາມຕັ້ງໃຈຂອງເຮົາ, ປ່ອຍໃຫ້ຊີວິດຂອງເຮົາໄຫຼສູ່ທ່າມກາງພວກເຈົ້າ, ຈົ່ງດຳລົງຊີວິດຕາມພຣະທຳຂອງເຮົາ ແລະປະຕິບັດຕາມເງື່ອນໄຂຄວາມຕ້ອງການຂອງເຮົາ.

ຈົ່ງອຸທິດກຳລັງທັງຫມົດຂອງເຈົ້າໃຫ້ກັບເລື່ອງຕ່າງໆທີ່ເຮົາໄດ້ມອບໝາຍໃຫ້ເຈົ້າ; ຈົ່ງເຮັດສຸດຄວາມອາດສາມາດຂອງເຈົ້າເພື່ອຄວາມເພິ່ງພໍໃຈຂອງເຮົາ. ເຮົາແມ່ນອຳນາດຂອງເຈົ້າ ແລະ ເຮົາແມ່ນຄວາມສຸກຂອງເຈົ້າ... ເຮົາແມ່ນທຸກສິ່ງຂອງເຈົ້າ. ຈົ່ງສະແຫວງຫາແຕ່ເຮົາ. ເຮົາຮູ້ຄວາມປາຖະໜາທີ່ແທ້ຈິງໃນຫົວໃຈຂອງເຈົ້າ ແລະ ຮູ້ວ່າ ເຈົ້າເສຍສະຫຼະຕົນເອງດ້ວຍຄວາມຈິງໃຈເພື່ອເຮົາ, ແຕ່ເຈົ້າຄວນຮູ້ວິທີສະແດງຄວາມຈົງຮັກພັກດີຕໍ່ເຮົາ ໃນເຮືອນຂອງເຮົາ ແລະ ວິທີທີ່ຈະຕິດຕາມເຮົາຈົນເຖິງທີ່ສຸດ.

ຄຣິດຕະຈັກແມ່ນຫົວໃຈຂອງເຮົາ ແລະ ເຮົາກຳລັງຮ້ອນຮົນດ້ວຍຄວາມກັງວົນເພື່ອກໍ່ສ້າງຄຣິດຕະຈັກຂອງເຮົາ. ເຈົ້າຄວນສະຫລະຕົວເອງໃຫ້ແກ່ເຮົາດ້ວຍການຖວາຍຕົນຢ່າງບໍ່ຕ້ອງລັງເລໃຈແມ່ນແຕ່ໜ້ອຍດຽວ ແລະ ຄຳນຶງເຖິງຄວາມປະສົງຂອງເຮົາເພື່ອວ່າ ຫົວໃຈຂອງເຮົາຈະໄດ້ເພິ່ງພໍໃຈ.

# ບົດທີ 32

ແມ່ນຫຍັງຄືແສງສະຫວ່າງ? ໃນອະດີດ ພວກເຈົ້າເຫັນການປ່ຽນແປງແຫ່ງພາລະກິດຂອງພຣະວິນຍານບໍລິສຸດເປັນແສງສະຫວ່າງ. ມີແສງສະຫວ່າງທີ່ແທ້ຈິງຢູ່ຕະລອດເວລາ ນັ້ນຄືການຮັບເອົາສິ່ງທີ່ພຣະເຈົ້າເປັນຜ່ານການຫຍັບເຂົ້າໃກ້ເຮົາ ແລະ ສົນທະນາກັບເຮົາ; ການມີຄວາມເຂົ້າໃຈໃນພຣະທຳຂອງພຣະເຈົ້າ ແລະ ການເຂົ້າໃຈຄວາມປະສົງຂອງພຣະເຈົ້າໃນພຣະທຳຂອງພຣະອົງ, ຄືວ່າ ໃນຂະນະທີ່ກຳລັງກິນ ແລະ ດື່ມ, ເຈົ້າຮູ້ສຶກເຖິງພຣະວິນຍານແຫ່ງພຣະທຳຂອງພຣະເຈົ້າ ແລະ ຮັບເອົາພຣະທຳຂອງພຣະເຈົ້າໃຫ້ຢູ່ຂ້າງໃນຕົວພວກເຈົ້າ; ເຈົ້າເຂົ້າໃຈສິ່ງທີ່ພຣະອົງເປັນຜ່ານປະສົບການ ແລະ ຮັບເອົາແສງເຍືອງທາງຂອງພຣະເຈົ້າໃນຂະນະທີ່ກຳລັງສື່ສານກັບພຣະອົງ; ທັງໝົດແມ່ນຄວາມສະຫວ່າງ. ເຈົ້າຍັງສາມາດຖືກສ່ອງແສງສະຫວ່າງ ແລະ ການມີຄວາມເຂົ້າໃຈໃນພຣະທຳຂອງພຣະເຈົ້າຕະລອດເວລາ ໃນຂະນະທີ່ກຳລັງຕຶກຕອງ ແລະ ໄຕ່ຕອງ. ຖ້າເຈົ້າເຂົ້າໃຈພຣະທຳຂອງພຣະເຈົ້າ ແລະ ເຈົ້າຮູ້ສຶກເຖິງແສງສະຫວ່າງໃໝ່, ແລ້ວເຈົ້າບໍ່ໄດ້ມີລິດອຳນາດໃນການຮັບໃຊ້ຂອງເຈົ້າບໍ? ພວກເຈົ້າກັງວົນໃຈຫຼາຍໃນຂະນະທີ່ພວກເຈົ້າຮັບໃຊ້! ນັ້ນກໍຍ້ອນພວກເຈົ້າບໍ່ໄດ້ສຳຜັດຄວາມເປັນຈິງ, ເຈົ້າບໍ່ມີປະສົບການ ຫຼື ຄວາມເຂົ້າໃຈທີ່ແທ້ຈິງ. ຖ້າເຈົ້າມີຄວາມເຂົ້າໃຈທີ່ແທ້ຈິງ, ແລ້ວເຈົ້າຈະບໍ່ຮູ້ຈັກວິທີການຮັບໃຊ້ບໍ? ເມື່ອສິ່ງໃດໜຶ່ງເກີດຂຶ້ນກັບເຈົ້າ, ເຈົ້າຕ້ອງຜະເຊີນບັນຫາເຫຼົ່ານັ້ນຢ່າງພາກພຽນ. ຖ້າຢູ່ໃນສະພາບແວດລ້ອມທີ່ງ່າຍ ແລະ ສະດວກສະບາຍແລ້ວ, ເຈົ້າສາມາດດຳລົງຊີວິດໃນແສງສະຫວ່າງແຫ່ງໃບໜ້າຂອງພຣະເຈົ້າ, ແລ້ວເຈົ້າຈະເຫັນໜ້າຂອງພຣະເຈົ້າໃນແຕ່ລະມື້. ຖ້າເຈົ້າເຫັນໃບໜ້າຂອງພຣະເຈົ້າ ແລະ ສື່ສານກັບພຣະອົງ, ເຈົ້າຈະບໍ່ມີແສງສະຫວ່າງບໍ? ພວກເຈົ້າບໍ່ໄດ້ເຂົ້າສູ່ຄວາມເປັນຈິງ ແລະ ພວກເຈົ້າກໍຢູ່ທາງນອກເພື່ອສະແຫວງຫາຢູ່ສະເໝີ; ຜົນຕາມມາກໍຄື ພວກເຈົ້າບໍ່ໄດ້ຄົ້ນພົບຫຍັງເລີຍ ແລະ ຄວາມຄືບໜ້າຂອງພວກເຈົ້າໃນຊີວິດກໍໄດ້ຖືກລ້າຊ້າ.

ຢ່າໃສ່ໃຈກັບສິ່ງທີ່ຢູ່ພາຍນອກ; ຖ້າເຈົ້າພຽງແຕ່ຫຍັບເຂົ້າໃກ້ພຣະເຈົ້າຢູ່ພາຍໃນ, ສື່ສານໃຫ້ເລິກພໍ ແລະ ຮູ້ສຶກເຖິງຄວາມປະສົງຂອງພຣະເຈົ້າ, ແລ້ວເຈົ້າກໍຈະມີເສັ້ນທາງໃນການຮັບໃຊ້ຂອງເຈົ້າ? ພວກເຈົ້າຈຳເປັນຕ້ອງໃສ່ໃຈ ແລະ ເຊື່ອຟັງຢ່າງພາກພຽນ. ຖ້າເຈົ້າເຮັດທຸກສິ່ງຕາມພຣະທຳຂອງເຮົາເທົ່ານັ້ນ ແລະ ເຂົ້າສູ່ເສັ້ນທາງທີ່ເຮົາຊີ້ໃຫ້ເຫັນ, ແລ້ວເຈົ້າຈະບໍ່ມີເສັ້ນທາງບໍ? ຖ້າເຈົ້າຄົ້ນພົບເສັ້ນທາງເຂົ້າສູ່ຄວາມເປັນຈິງ, ແລ້ວເຈົ້າກໍຍັງມີເສັ້ນທາງທີ່ຈະຮັບໃຊ້ພຣະເຈົ້າ. ມັນງ່າຍດາຍ! ມາຢູ່ຕໍ່ໜ້າເຮົາໃຫ້ຫຼາຍຍິ່ງຂຶ້ນ, ໄຕ່ຕອງພຣະທຳຂອງເຮົາຫຼາຍຍິ່ງຂຶ້ນ ແລະ ເຈົ້າຈະຮັບເອົາສິ່ງທີ່ເຈົ້າຂາດເຂີນ. ເຈົ້າຈະຍັງມີຄວາມເຂົ້າໃຈໃໝ່, ການສ່ອງແສງສະຫວ່າງໃໝ່ ແລະ ເຈົ້າຈະມີແສງສະຫວ່າງ.

# ບົດທີ 33

ອານາຈັກຂອງເຮົາຕ້ອງການຄົນທີ່ຊື່ສັດ, ບໍ່ໜ້າຊື່ໃຈຄົດ ແລະ ບໍ່ຫຼອກລວງ. ຄົນທີ່ຈິງໃຈ ແລະ ຊື່ສັດບໍ່ແມ່ນຄົນທີ່ບໍ່ເປັນທີ່ນິຍົມໃນໂລກບໍ? ເຮົາພຽງຢູ່ກົງກັນຂ້າມ. ມັນເປັນເລື່ອງທີ່ຮັບໄດ້ທີ່ຈະໃຫ້ຄົນຊື່ສັດມາຫາເຮົາ; ເຮົາປິຕິຍິນດີໃນຄົນປະເພດນີ້ ແລະ ເຮົາກໍ່ຍັງຕ້ອງການຄົນປະເພດນີ້ດ້ວຍ. ນີ້ແມ່ນຄວາມຊອບທຳຂອງເຮົາແທ້ໆ. ບາງຄົນກໍບໍ່ຮູ້; ພວກເຂົາບໍ່ສາມາດຮູ້ສຶກເຖິງພາລະກິດຂອງພຣະວິນຍານບໍລິສຸດ ແລະ ພວກເຂົາບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ. ພວກເຂົາບໍ່ສາມາດເຫັນສະພາບແວດລ້ອມເຊິ່ງຄອບຄົວຂອງພວກເຂົາ ແລະ ຄົນອ້ອມຂ້າງພວກເຂົາດຳລົງຢູ່ຢ່າງຊັດເຈນ, ພວກເຂົາເຮັດສິ່ງຕ່າງໆຢ່າງຫຼັບຫູຫຼັບຕາ ແລະ ສູນເສຍໂອກາດທີ່ຈະໄດ້ຮັບພຣະຄຸນຫຼາຍຄັ້ງ. ເທື່ອແລ້ວເທື່ອເລົ່າ, ພວກເຂົາກໍກິນແໜງກັບການກະທຳຂອງພວກເຂົາ ແລະ ເມື່ອພວກເຂົາຜະເຊີນກັບບັນຫາ, ພວກເຂົາກໍບໍ່ສາມາດເຫັນບັນຫານັ້ນຢ່າງຊັດເຈນໄດ້. ບາງເທື່ອ ພວກເຂົາສາມາດເພິ່ງພາພຣະເຈົ້າເພື່ອເພີ່ມຕື່ມໄຊຊະນະ, ແຕ່ເມື່ອພວກເຂົາຜະເຊີນກັບບັນຫາທີ່ຄ້າຍຄືກັນຫຼັງຈາກນັ້ນ, ຄວາມເຈັບປ່ວຍແບບເກົ່າໆກໍກັບຄືນມາ ແລະ ພວກເຂົາບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ. ແຕ່ເຮົາບໍ່ໄດ້ເບິ່ງໃນສິ່ງເຫຼົ່ານີ້ ແລະ ເຮົາບໍ່ຈື່ການຝ່າຝືນຂອງພວກເຈົ້າ. ກົງກັນຂ້າມ ເຮົາຕ້ອງການຊ່ວຍເຫຼືອພວກເຈົ້າຈາກດິນແດນທີ່ສັບສົນປົນເປກັນນີ້ ແລະ ຍອມໃຫ້ພວກເຈົ້າເລີ່ມຕົ້ນໃໝ່ຊີວິດຂອງພວກເຈົ້າ. ເຮົາໄດ້ອະໄພໂທດໃຫ້ກັບພວກເຈົ້າເທື່ອແລ້ວເທື່ອເລົ່າ. ເຖິງຢ່າງໃດກໍຕາມ, ຕອນນີ້ແມ່ນບາດກ້າວທີ່ສຳຄັນຫຼາຍທີ່ສຸດ. ພວກເຈົ້າບໍ່ສາມາດສັບສົນໄດ້ອີກແລ້ວ ແລະ ບໍ່ສາມາດດັນຕໍ່ໄປແບບນັ້ນອີກ, ແບບໄປໆ ແລະ ຢຸດໆ. ເມື່ອໃດເຈົ້າຈຶ່ງຈະສາມາດໄປເຖິງຈຸດໝາຍປາຍທາງ? ພວກເຈົ້າຕ້ອງເຮັດສຸດຄວາມສາມາດຂອງພວກເຈົ້າເພື່ອແລ່ນສູ່ຫຼັກໄຊໂດຍບໍ່ຢຸດ. ຢ່າຜ່ອນຄວາມໄວລົງໃນເວລາທີ່ສຳຄັນທີ່ສຸດ, ຈົ່ງກ້າວໄປທາງໜ້າຢ່າງກ້າຫານ ແລະ ງານລ້ຽງສະຫຼອງທີ່ອຸດົມສົມບູນກໍຢູ່ຕໍ່ໜ້າພວກເຈົ້າ. ຈົ່ງນຸ່ງເສື້ອຜ້າແຕ່ງດອງ ແລະ ເສື້ອຄຸມອັນຊອບທຳຂອງເຈົ້າໄວໆ ແລະ ເຂົ້າຮ່ວມອາຫານຄ່ຳຂອງງານດອງຂອງພຣະຄຣິດ; ເພີດເພີນກັບຄວາມສຸກໃນຄອບຄົວຊົ່ວນິດນິລັນ! ເຈົ້າຈະບໍ່ເສົ້າໃຈ, ໂສກເສົ້າ ແລະ ເມື່ອຍຄືແຕ່ກ່ອນອີກຕໍ່ໄປ. ໃນເວລານັ້ນ ທຸກສິ່ງຈະຫາຍໄປຄືກັບຄວັນ ແລະ ມີພຽງແຕ່ຊີວິດຂອງພຣະຄຣິດທີ່ໄດ້ຟື້ນຄືນຈະມີລິດອຳນາດໃນຕົວເຈົ້າ. ຈະມີພຣະວິຫານທີ່ຖືກຊຳລະລ້າງ ແລະ ເຮັດໃຫ້ສະອາດຢູ່ຂ້າງໃນຕົວເຈົ້າ ແລະ ຊີວິດແຫ່ງການຟື້ນຄືນທີ່ເຈົ້າໄດ້ຮັບກໍຈະອາໄສຢູ່ໃນຕົວເຈົ້າຈາກນີ້ ແລະ ຕະລອດໄປ!

# ບົດທີ 34

ພຣະເຈົ້າອົງຊົງລິດທານຸພາບສູງສຸດນັ້ນມີອຳນາດໃນທຸກສິ່ງ, ບັນລຸທຸກຢ່າງ ແລະ ເປັນພຣະເຈົ້າທີ່ແທ້ຈິງຢ່າງສົມບູນ! ພຣະອົງບໍ່ພຽງແຕ່ຖືດວງດາວທັງເຈັດໄວ້, ໄດ້ຮັບປະທານດ້ວຍພຣະວິນຍານທັງເຈັດ, ມີຕາເຈັດໜ່ວຍ, ເປີດກາປະທັບທັງເຈັດອອກ ແລະ ເປີດໜັງສືມ້ວນອອກເທົ່ານັ້ນ, ແຕ່ຍິ່ງໄປກວ່ານັ້ນ, ພຣະອົງຄຸ້ມຄອງໄພພິບັດທັງເຈັດ ແລະ ຖ້ວຍທັງເຈັດ ແລະ ເປີດເຜີຍໃຫ້ເຫັນສຽງຟ້າຮ້ອງທັງເຈັດ. ດົນນານມາແລ້ວ ພຣະອົງໄດ້ເປົ່າແກທັງເຈັດເຊັ່ນກັນ! ທຸກສິ່ງທີ່ພຣະອົງສ້າງ ແລະ ເຮັດໃຫ້ສົມບູນຄວນສັນລະເສີນພຣະອົງ, ມອບສະຫງ່າລາສີໃຫ້ແກ່ພຣະອົງ ແລະ ເຊີດຊູບັນລັງຂອງພຣະອົງ. ໂອ, ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພຣະອົງຄືທຸກສິ່ງ. ພຣະອົງໄດ້ເຮັດໃຫ້ທຸກສິ່ງສຳເລັດໄປ ແລະ ດ້ວຍພຣະອົງ ທຸກສິ່ງສົມບູນ, ສົດໃສ, ຖືກປົດປ່ອຍ, ເປັນອິດສະຫຼະ, ແຂງແຮງ ແລະ ມີອຳນາດ! ບໍ່ມີຫຍັງທີ່ລີ້ລັບ ຫຼື ຖືກປົດບັງໄວ້ເລີຍ; ດ້ວຍພຣະອົງ, ຄວາມລຶກລັບທັງໝົດໄດ້ຖືກເປີດເຜີຍ. ຍິ່ງໄປກວ່ານັ້ນ, ພຣະອົງໄດ້ພິພາກສາສັດຕູຂອງພຣະອົງຈຳນວນຫຼວງຫຼາຍ, ພຣະອົງເປີດເຜີຍຄວາມສະຫງ່າຜ່າເຜີຍຂອງພຣະອົງ, ສຳແດງໄຟທີ່ລຸກໄໝ້ຂອງພຣະອົງ, ພຣະອົງສະແດງຄວາມໂກດຮ້າຍຂອງພຣະອົງ ແລະ ຫຼາຍໄປກວ່ານັ້ນ ແມ່ນພຣະອົງຊົງສຳແດງສະຫງ່າລາສີທີ່ບໍ່ເຄີຍມີມາກ່ອນ, ເປັນນິລັນດອນ ແລະ ບໍ່ສິ້ນສຸດເດັດຂາດ! ທຸກຄົນຄວນຕື່ນຂຶ້ນມາໂຮຮ້ອງ ແລະ ຮ້ອງເພງຢ່າງທົ່ວເຖິງ, ຍ້ອງຍໍພຣະເຈົ້າອົງຊົງລິດທານຸພາບສູງສຸດອົງນີ້ທີ່ແທ້ຈິງຢ່າງສົມບູນ, ມີຊີວິດໃນທຸກສິ່ງ, ອຸດົມສົມບູນ, ມີສະຫງ່າລາສີ ແລະ ເປັນຈິງ ຜູ້ເຊິ່ງເປັນຢູ່ຕະຫຼອດນິລັນດອນ. ບັນລັງຂອງພຣະອົງຄວນໄດ້ຮັບການຍົກຍ້ອງຢ່າງຕໍ່ເນື່ອງ, ນາມອັນບໍລິສຸດຂອງພຣະອົງຄວນໄດ້ຮັບການຍ້ອງຍໍ ແລະ ມີສະຫງ່າລາສີ. ນີ້ແມ່ນຄວາມປະສົງນິລັນດອນຂອງເຮົາ ນັ້ນກໍຄືຂອງພຣະເຈົ້າ ແລະ ແມ່ນພອນທີ່ບໍ່ສິ້ນສຸດທີ່ພຣະອົງເປີດເຜີຍ ແລະ ປະທານໃຫ້ແກ່ພວກເຮົາ! ມີໃຜແດ່ໃນພວກເຮົາທີ່ບໍ່ໄດ້ສືບທອດມັນ? ເພື່ອສືບທອດພອນຂອງພຣະເຈົ້າ, ຄົນໆໜຶ່ງຕ້ອງຍົກຍ້ອງນາມອັນບໍລິສຸດຂອງພຣະອົງ ແລະ ມາອ້ອມລ້ອມບັນລັງຂອງພຣະອົງດ້ວຍການນະມັດສະການ. ທຸກຄົນທີ່ມາຫາພຣະອົງດ້ວຍແຮງຈູງໃຈອື່ນ ແລະ ເຈດຕະນາອື່ນຈະຖືກດັບສູນໄປດ້ວຍໄຟທີ່ລຸກໄໝ້ຂອງພຣະອົງ. ມື້ນີ້ແມ່ນມື້ທີ່ສັດຕູຂອງພຣະອົງຈະຖືກພິພາກສາ ແລະ ແມ່ນໃນມື້ນີ້ເຊັ່ນກັນທີ່ພວກເຈົ້າຈະພິນາດໄປ. ຍິ່ງໄປກວ່ານັ້ນ, ນັ້ນຍັງເປັນມື້ທີ່ເຮົາ ຜູ້ເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດຈະຖືກເປີດເຜີຍ ແລະ ເປັນມື້ທີ່ເຮົາຈະໄດ້ຮັບສະຫງ່າລາສີ ແລະ ກຽດຕິສັກ. ໂອ ຄົນທັງຫຼາຍເອີຍ! ຈົ່ງລຸກຂຶ້ນໂດຍໄວເພື່ອຍົກຍ້ອງ ແລະ ຕ້ອນຮັບພຣະເຈົ້າອົງຊົງລິດທານຸພາບສູງສຸດຜູ້ທີ່ສົ່ງຄວາມຮັກຄວາມເມດຕາໃຫ້ແກ່ພວກເຮົາແຕ່ອະດີດຕະການຈົນເຖິງນິລັນດອນ, ນຳໃຊ້ຄວາມລອດພົ້ນ ແລະ ປະທານພອນໃຫ້ແກ່ພວກເຮົາ, ເຮັດໃຫ້ລູກຊາຍຂອງພຣະອົງສົມບູນ ແລະ ບັນລຸອານາຈັກຂອງພຣະອົງໄດ້ສຳເລັດ! ນີ້ແມ່ນການກະທຳອັນໜ້າອັດສະຈັນຂອງພຣະເຈົ້າ! ນີ້ແມ່ນການກຳນົດໄວ້ລ່ວງໜ້າ ແລະ ການຈັດແຈງນິລັນດອນຂອງພຣະເຈົ້າ ທີ່ພຣະອົງເອງໄດ້ມາເພື່ອຊ່ວຍພວກເຮົາໃຫ້ລອດພົ້ນ, ເພື່ອເຮັດໃຫ້ພວກເຮົາສົມບູນ ແລະ ເພື່ອນຳພວກເຮົາສູ່ຄວາມສະຫງ່າລາສີ.

ທຸກຄົນທີ່ບໍ່ລຸກຂຶ້ນ ແລະ ເປັນພະຍານແມ່ນບັນພະບຸລຸດຂອງຄົນຕາບອດ ແລະ ກະສັດແຫ່ງຄວາມບໍ່ຮູ້. ພວກເຂົາຈະກາຍເປັນຄົນໂງ່ຊື່ວນິລັນດອນ, ເປັນຄົນໂງ່ຈ້າຕະຫຼອດການ; ຄົນຕາຍທີ່ຕາບອດຕະຫຼອດນິລັນດອນ. ດ້ວຍເຫດນີ້ ວິນຍານຂອງພວກເຮົາຈຶ່ງຄວນຕື່ນຂຶ້ນ! ທຸກຄົນຄວນລຸກຂຶ້ນ! ໂຮຮ້ອງ, ສັນລະເສີນ ແລະ ຍົກຍ້ອງຢ່າງບໍ່ສິ້ນສຸດຕໍ່ກະສັດແຫ່ງສະຫງ່າລາສີ, ພຣະບິດາແຫ່ງຄວາມເມດຕາ, ພຣະບຸດແຫ່ງການໄຖ່ບາບ, ພຣະວິນຍານທີ່ອຸດົມສົມບູນທັງເຈັດ, ພຣະເຈົ້າອົງຊົງລິດທານຸພາບສູງສຸດ ຜູ້ທີ່ນຳໄຟທີ່ລຸກໄໝ້ອັນສະຫງ່າຜ່າເຜີຍ ແລະ ການພິພາກສາອັນຊອບທຳມາ ແລະ ຜູ້ທີ່ພຽງພໍ, ອຸດົມສົມບູນ, ມີລິດທານຸພາບສູງສຸດ ແລະ ສົມບູນຢ່າງເຕັມທີ່. ບັນລັງຂອງພຣະອົງຈະຖືກຍົກຍ້ອງຕະຫຼອດໄປ! ທຸກຄົນຄວນເຫັນວ່ານີ້ແມ່ນສະຕິປັນຍາຂອງພຣະເຈົ້າ; ມັນແມ່ນເສັ້ນທາງທີ່ອັດສະຈັນຂອງພຣະອົງສູ່ຄວາມລອດພົ້ນ ແລະ ການບັນລຸຄວາມປະສົງທີ່ມີສະຫງ່າລາສີຂອງພຣະອົງ. ຖ້າພວກເຮົາບໍ່ລຸກຂຶ້ນ ແລະ ເປັນພະຍານ, ແລ້ວຫຼັງຈາກທີ່ຊ່ວງເວລາຜ່ານໄປ ຈະບໍ່ມີການຍ້ອນກັບ. ບໍ່ວ່າພວກເຮົາຈະໄດ້ຮັບພອນ ຫຼື ຄວາມໂຊກຮ້າຍແມ່ນຖືກກຳນົດໃນຂັ້ນຕອນປັດຈຸບັນຂອງການເດີນທາງຂອງພວກເຮົາ, ອີງຕາມສິ່ງທີ່ພວກເຮົາເຮັດ, ສິ່ງທີ່ພວກເຮົາຄິດ ແລະ ສິ່ງທີ່ພວກເຮົາກຳລັງດຳລົງຊີວິດຢູ່ໃນຕອນນີ້. ພວກເຈົ້າຄວນປະພຶດແນວໃດ? ໃຫ້ເປັນພະຍານ ແລະ ຍ້ອງຍໍພຣະເຈົ້າຕະຫຼອດໄປ; ຍ້ອງຍໍພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະຄຣິດແຫ່ງຍຸກສຸດທ້າຍ, ພຣະເຈົ້າທີ່ນິລັນດອນ, ເປັນເອກະລັກ ແລະ ແທ້ຈິງ!

ນັບແຕ່ນີ້ໄປ, ເຈົ້າຄວນເຫັນຢ່າງຊັດເຈນວ່າ ທຸກຄົນທີ່ບໍ່ເປັນພະຍານໃຫ້ແກ່ພຣະເຈົ້າ ນັ້ນກໍຄືຜູ້ທີ່ບໍ່ເປັນພະຍານໃຫ້ແກ່ພຣະເຈົ້ານີ້ທີ່ເປັນເອກະລັກ ແລະ ແທ້ຈິງ ພ້ອມທັງບັນດາຜູ້ທີ່ມີຄວາມສົງໄສກ່ຽວກັບພຣະອົງ, ພວກເຂົາທັງໝົດລ້ວນແລ້ວແຕ່ເຈັບປ່ວຍ ແລະ ຕາຍ ແລະ ເປັນຜູ້ທີ່ທ້າທາຍພຣະເຈົ້າ! ພຣະທຳຂອງພຣະເຈົ້າໄດ້ຖືກພິສູດແລ້ວຕັ້ງແຕ່ສະໄໝບູຮານ; ທຸກຄົນທີ່ບໍ່ຮ່ວມຢູ່ກັບເຮົາກໍເຮັດໃຫ້ແຕກຊະຊາຍໄປ ແລະ ຜູ້ທີ່ບໍ່ຢູ່ກັບເຮົາກໍຕໍ່ສູ້ເຮົາ; ນີ້ແມ່ນຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້ເຊິ່ງຖືກສະຫຼັກໄວ້ຢູ່ໃນຫີນ! ບັນດາຜູ້ທີ່ບໍ່ເປັນພະຍານໃຫ້ພຣະເຈົ້າແມ່ນລູກນ້ອງຂອງຊາຕານ. ຄົນດັ່ງກ່າວໄດ້ມາເພື່ອລົບກວນ ແລະ ຫຼອກລວງລູກໆຂອງພຣະເຈົ້າ ແລະ ເພື່ອຂັດຂວາງການຄຸ້ມຄອງຂອງພຣະອົງ; ພວກເຂົາຕ້ອງຖືກລົງດາບ! ທຸກຄົນທີ່ສະແດງເຈດຕະນາທີ່ດີກໍສະແຫວງຫາຄວາມພິນາດຂອງພວກເຂົາເອງ. ເຈົ້າຄວນຟັງ ແລະ ເຊື່ອພຣະຄຳຂອງພຣະວິນຍານຂອງພຣະເຈົ້າ, ຍ່າງຕາມເສັ້ນທາງຂອງພຣະວິນຍານຂອງພຣະເຈົ້າ ແລະ ດຳລົງຊີວິດຕາມພຣະທຳຂອງພຣະວິນຍານຂອງພຣະເຈົ້າ. ຍິ່ງໄປກວ່ານັ້ນ, ເຈົ້າຄວນຍົກຍ້ອງບັນລັງຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດຈົນເຖິງເວລາສຸດທ້າຍ!

ພຣະເຈົ້າອົງຊົງລິດທານຸພາບສູງສຸດແມ່ນພຣະເຈົ້າຂອງພຣະວິນຍານທັງເຈັດ! ພຣະອົງຍັງເປັນພຣະເຈົ້າຂອງດວງຕາທັງເຈັດ ແລະ ດວງດາວທັງເຈັດດ້ວຍ; ພຣະອົງເປີດກາປະທັບທັງເຈັດອອກ ແລະ ໜັງສືມ້ວນທັງໝົດໄດ້ຖືກມາຍອອກໂດຍພຣະອົງ! ພຣະອົງໄດ້ເປົ່າແກທັງເຈັດ ແລະ ຖ້ວຍທັງເຈັດ ແລະ ໄພພິບັດທັງເຈັດກໍຢູ່ໃນກຳມືຂອງພຣະອົງ ເພື່ອຈະໄດ້ຮັບການປົດປ່ອຍຕາມຄວາມປະສົງຂອງ

ພຣະອົງ. ໂອ, ສຽງຟ້າຮ້ອງທັງເຈັດທີ່ຖືກປິດຕາຍມາຢູ່ສະເໝີ! ເວລາທີ່ຈະເປີດເຜີຍພວກມັນໄດ້ມາເຖິງແລ້ວ! ພຣະອົງຜູ້ຈະເຮັດໃຫ້ເກີດສຽງຟ້າຮ້ອງທັງເຈັດໄດ້ປາກົດຕົວຢູ່ຕໍ່ຕາພວກເຮົາແລ້ວ!

ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ດ້ວຍພຣະອົງ, ທຸກຄົນໄດ້ຖືກປົດປ່ອຍ ແລະ ເປັນອິດສະຫຼະ; ບໍ່ມີຄວາມຫຍຸ້ງຍາກ ແລະ ທຸກສິ່ງເປັນໄປຢ່າງລາບລື້ນ! ບໍ່ມີຫຍັງກ້າຂັດຂວາງ ຫຼື ກີດກັ້ນພຣະອົງ ແລະ ທຸກສິ່ງຍອມຢູ່ຕໍ່ໜ້າພຣະອົງ. ຜູ້ໃດທີ່ບໍ່ຍອມຈະຕ້ອງຕາຍ!

ພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະເຈົ້າທີ່ມີດວງຕາເຈັດດວງ! ທັງໝົດຊັດເຈນຢ່າງສົມບູນ, ທັງໝົດສະຫວ່າງ ແລະ ບໍ່ໄດ້ຖືກປົດບັງໄວ້ ແລະ ທັງໝົດຖືກເປີດເຜີຍ ແລະ ເປີດອອກ. ດ້ວຍພຣະອົງ, ທັງໝົດຊັດເຈນຢ່າງແຈ່ມແຈ້ງ ແລະ ບໍ່ແມ່ນແຕ່ພຣະເຈົ້າເອງທີ່ເປັນເຊັ່ນນີ້, ແຕ່ລູກຊາຍຂອງພຣະອົງກໍເປັນແບບນີ້ເຊັ່ນກັນ. ບໍ່ມີໃຜ, ບໍ່ມີສິ່ງໃດ ແລະ ບໍ່ມີເລື່ອງໃດສາມາດຖືກປົດບັງໄວ້ຕໍ່ໜ້າພຣະອົງ ແລະ ລູກຊາຍຂອງພຣະອົງ!

ດວງດາວທັງເຈັດຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດນັ້ນແຈ້ງສະຫວ່າງ! ຄຣິສຕະຈັກໄດ້ຖືກເຮັດໃຫ້ສົມບູນໂດຍພຣະອົງ; ພຣະອົງຈັດຕັ້ງຜູ້ສົ່ງຂ່າວຄຣິສຕະຈັກຂອງພຣະອົງ ແລະ ຄຣິສຕະຈັກທັງໝົດກໍຢູ່ພາຍໃນການຈັດຫາໃຫ້ຂອງພຣະອົງ. ພຣະອົງເປີດກາປະທັບທັງເຈັດອອກ ແລະ ພຣະອົງເອງນຳເອົາແຜນການຄຸ້ມຄອງຂອງພຣະອົງ ແລະ ຄວາມປະສົງຂອງພຣະອົງໄປສູ່ຄວາມສຳເລັດ. ໜັງສືມ້ວນແມ່ນພາສາທາງແຫ່ງການຄຸ້ມຄອງຝ່າຍວິນຍານທີ່ລຶກລັບຂອງພຣະອົງ ແລະ ໄດ້ຖືກມາຍອອກ ແລະ ເປີດເຜີຍໂດຍພຣະອົງ!

ທຸກຄົນຄວນຟັງສຽງແກທັງເຈັດທີ່ດັງກ້ອງຂອງພຣະອົງ. ດ້ວຍພຣະອົງ, ທັງໝົດເປັນທີ່ຮູ້ຈັກ, ບໍ່ລີ້ລັບອີກຈັກເທື່ອ ແລະ ບໍ່ມີຄວາມໂສກເສົ້າອີກຕໍ່ໄປ. ທັງໝົດໄດ້ຖືກເປີດເຜີຍ ແລະ ທັງໝົດໄດ້ຮັບໄຊຊະນະ!

ແກທັງເຈັດຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດນັ້ນແມ່ນແກທີ່ເປີດເຜີຍ, ມີສະຫງ່າລາສີ ແລະ ມີໄຊຊະນະ! ພວກມັນຍັງເປັນແກທີ່ພິພາກສາພວກສັດຕູຂອງພຣະອົງ! ໃນທ່າມກາງໄຊຊະນະຂອງພຣະອົງ, ແກເຂົາສັດຂອງພຣະອົງໄດ້ຮັບການຍົກຍ້ອງ! ພຣະອົງປົກຄອງເໜືອຈັກກະວານທັງໝົດ!

ພຣະອົງໄດ້ກະກຽມໄພພິບັດທັງເຈັດຖ້ວຍ, ພວກສັດຕູຂອງພຣະອົງໄດ້ຖືກຕັ້ງເປົ້າ ແລະ ພວກເຂົາຖືກປ່ອຍອອກມາໃນກະແສນ້ຳທີ່ແຮງ ແລະ ສັດຕູເຫຼົ່ານັ້ນຈະຖືກກືນກິນຢູ່ໃນແປວໄຟຂອງໄຟທີ່ລຸກໄໝ້ຂອງພຣະອົງ. ພຣະເຈົ້າອົງຊົງລິດທານຸພາບສູງສຸດສຳແດງລິດເດດສິດອຳນາດຂອງພຣະອົງ ແລະ ພວກສັດຕູທັງໝົດຂອງພຣະອົງກໍພິນາດໄປ. ສຽງຟ້າຮ້ອງທັງເຈັດສຸດທ້າຍຈະບໍ່ຖືກປົດຜະນຶກໄວ້ຕໍ່ໜ້າພຣະເຈົ້າອົງຊົງລິດທານຸພາບສູງສຸດອີກຕໍ່ໄປ; ພວກມັນທັງໝົດໄດ້ຖືກເປີດເຜີຍ! ພວກມັນທັງໝົດໄດ້ຖືກເປີດເຜີຍ! ພຣະອົງຂ້າສັດຕູຂອງພຣະອົງໃຫ້ຕາຍດ້ວຍສຽງຟ້າຮ້ອງທັງເຈັດ, ເຮັດໃຫ້ໂລກມີສະຖຽນລະພາບ ແລະ ເຮັດໃຫ້ມັນຮັບໃຊ້ພຣະອົງ, ບໍ່ຕ້ອງເສຍເປົ່າອີກຕໍ່ໄປ!

ພຣະເຈົ້າອົງຊົງລິດທານຸພາບສູງສຸດຜູ້ຊອບທຳ! ພວກຂ້ານ້ອຍຂໍຍ້ອງຍໍພຣະອົງຕະຫຼອດໄປ!

ພຣະອົງສົມຄວນໄດ້ຮັບການສັນລະເສີນຢ່າງບໍ່ຢຸດຢັ້ງ ແລະ ການໂຮຮ້ອງ ແລະ ການຍົກຍ້ອງຊົ່ວນິລັນດອນ! ສຽງຝ້າຮ້ອງທັງເຈັດຂອງພຣະອົງບໍ່ພຽງແຕ່ຖືກໃຊ້ສຳລັບການພິພາກສາຂອງພຣະອົງ, ແຕ່ຫຼາຍໄປກວ່ານັ້ນແມ່ນຖືກໃຊ້ເພື່ອສະຫງ່າລາສີ ແລະ ສິດອຳນາດຂອງພຣະອົງ ເພື່ອເຮັດໃຫ້ທຸກສິ່ງສຳເລັດໄປ!

ທຸກຄົນສະເຫຼີມສະຫຼອງຕໍ່ໜ້າພຣະບັນລັງ, ຍົກຍ້ອງ ແລະ ສັນລະເສີນພຣະເຈົ້າອົງຊົງລິດທານຸພາບສູງສຸດ, ພຣະຄຣິດຂອງຍຸກສຸດທ້າຍ! ສຽງຂອງພວກມັນເຮັດໃຫ້ຈັກກະວານທັງໝົດສັ່ນສະເທືອນຄືກັບສຽງຝ້າຮ້ອງ! ແນ່ນອນວ່າ ທຸກສິ່ງເປັນຢູ່ຍ້ອນພຣະອົງ ແລະ ເກີດຂຶ້ນກໍຍ້ອນພຣະອົງ. ໃຜກ້າທີ່ຈະບໍ່ຖືວ່າສະຫງ່າລາສີທັງໝົດ, ກຽດຕິສັກ, ສິດອຳນາດ, ສະຕິປັນຍາ, ຄວາມບໍລິສຸດ, ໄຊຊະນະ ແລະ ການເປີດເຜີຍທັງໝົດລ້ວນເປັນຂອງພຣະອົງ? ນີ້ແມ່ນຄວາມສຳເລັດຕາມຄວາມປະສົງຂອງພຣະອົງ ແລະ ມັນເປັນຄວາມສຳເລັດຄັ້ງສຸດທ້າຍຂອງສ້າງການຄຸ້ມຄອງຂອງພຣະອົງ!

# ບົດທີ 35

ສຽງຟ້າຮ້ອງທັງເຈັດອອກມາຈາກບັນລັງ, ສັ່ນສະເທືອນຈັກກະວານ, ພິກສະຫວັນ ແລະ ແຜ່ນດິນໂລກ ແລະ ດັງກ້ອງໄປທົ່ວທ້ອງຟ້າ! ສຽງທະລຸຫູ ແລະ ຜູ້ຄົນບໍ່ສາມາດໜີມັນພົ້ນ ຫຼື ພວກເຂົາບໍ່ສາມາດລີ້ຈາກມັນໄດ້. ຟ້າຮ້ອງ ແລະ ຟ້າຜ່າລະເບີດອອກມາ ແລະ ໃນທັນທີ ສະຫວັນ ແລະ ແຜ່ນດິນໂລກກໍປ່ຽນແປງໄປ ແລະ ຜູ້ຄົນກໍໃກ້ຈະຕາຍ. ຈາກນັ້ນ, ດ້ວຍຄວາມໄວດັ່ງຟ້າຜ່າ, ອາວະກາດທັງໝົດກໍຖືກປົກຄຸມດ້ວຍພາຍຸຝົນທີ່ຮຸນແຮງ ແລະ ຕົກລົງມາຈາກສະຫວັນ! ໃນມຸມທີ່ໄກທີ່ສຸດຂອງແຜ່ນດິນໂລກ, ມັນບໍ່ຍອມໃຫ້ມີຄາບເປື້ອນເນື່ອງຈາກວ່າມັນລ້າງທົ່ວແຕ່ຫົວຮອດຕີນຢ່າງທົ່ວເຖິງຄືກັບການອາບນໍ້າ; ບໍ່ມີຫຍັງສາມາດລີ້ລັບຈາກມັນໄດ້ ຫຼື ບໍ່ມີໃຜສາມາດຫຼີກໜີຈາກມັນໄດ້. ສຽງດັງກ້ງວານຂອງຟ້າຮ້ອງ ຄືກັບແສງນາບເຫຼື້ອມຂອງຟ້າຜ່າ, ເປັ່ງປະກາຍດ້ວຍແສງທີ່ເຢືອກເຢັນ ແລະ ເຮັດໃຫ້ມະນຸດສັ່ນເຊັນດ້ວຍຄວາມຢ້ານກົວ! ດາບສອງຄົມອັນແຫຼມຄົມຟາດລົງໃສ່ລູກຊາຍແຫ່ງການກະບົດ ແລະ ພວກສັດຕູກໍປະເຊີນກັບຄວາມຫາຍະນະ, ບໍ່ມີບ່ອນໃຫ້ລີ້; ພວກເຂົາມຶນງົງຢູ່ທ່າມກາງລົມ ແລະ ຝົນ ແລະ ໂຊເຊຈາກການພັດ, ພວກເຂົາຕາຍລົງທັນທີສູ່ນໍ້າທີ່ໄຫຼ ແລະ ກໍຖືກພັດລ້າງໄປ. ມີພຽງຄວາມຕາຍ ແລະ ບໍ່ມີທາງອື່ນໃຫ້ພວກເຂົາມີຊີວິດລອດ. ຟ້າຮ້ອງທັງເຈັດອອກຈາກເຮົາ ແລະ ຖ່າຍທອດເຈດຕະນາຂອງເຮົາ ເຊິ່ງແມ່ນເພື່ອໂຈມຕີພວກລູກຊາຍກົກຂອງອີຢິບ, ເພື່ອລົງໂທດຄົນຊົ່ວຮ້າຍ ແລະ ຊໍາລະລ້າງຄຣິສຕະຈັກຂອງເຮົາໃຫ້ສະອາດ ເພື່ອວ່າທຸກຄົນອາດຈະມີຄວາມຜູກພັນເຊິ່ງກັນແລະກັນ, ປະຕິບັດຕົວເອງຢ່າງແທ້ຈິງ ແລະ ເປັນຈິດໜຶ່ງໃຈດຽວກັບເຮົາ ແລະ ເພື່ອໃຫ້ຄຣິສຕະຈັກທັງໝົດໃນຈັກກະວານຈະສາມາດຖືກສ້າງຂຶ້ນເປັນໜຶ່ງດຽວ. ນີ້ແມ່ນວັດຖຸປະສົງຂອງເຮົາ.

ສຽງຟ້າຮ້ອງດັງຂຶ້ນ ແລະ ສຽງຄວນຄາງກໍຕື່ນຂຶ້ນ. ບາງຄົນຕື່ນຈາກການຫຼັບໄຫຼຂອງຕົນ ແລະ ຕື່ນຕົກໃຈເປັນຢ່າງຍິ່ງ, ພວກເຂົາຄົ້ນຫາເລິກໆໃນຈິດວິນຍານຂອງພວກເຂົາ ແລະ ຟ້າວກັບໄປຢູ່ຕໍ່ໜ້າບັນລັງ. ພວກເຂົາຢຸດກົນອຸບາຍທີ່ປ່າເຖື່ອນ ແລະ ການກະທໍາທີ່ໂຫດຮ້າຍທາລຸນຂອງພວກເຂົາ; ມັນຍັງບໍ່ຊ້າເກີນໄປສໍາລັບຄົນເຊັ່ນນີ້ທີ່ຈະຕື່ນຂຶ້ນ. ເຮົາແນມເບິ່ງຈາກບັນລັງ. ເຮົາເບິ່ງເລິກເຂົ້າໄປໃນໃຈຂອງມະນຸດ. ເຮົາຊ່ວຍຜູ້ທີ່ປາຖະໜາເຮົາຢ່າງເອົາຈິງເອົາຈັງ ແລະ ຢ່າງແຮງກ້າໃຫ້ຮອດ ແລະ ເຮົາສົງສານພວກເຂົາ. ເຮົາຈະຊ່ວຍຜູ້ທີ່ຮັກເຮົາດ້ວຍໃຈຂອງພວກເຂົາໃຫ້ຫຼາຍກວ່າສິ່ງອື່ນໃດທັງໝົດຊົ່ວນິລັນດອນ, ຜູ້ທີ່ເຂົ້າໃຈຄວາມປະສົງຂອງເຮົາ ແລະ ຕິດຕາມເຮົາມາຈົນສຸດທາງ. ມືຂອງເຮົາຈະຈັບພວກເຂົາໄວ້ຢ່າງປອດໄພ ເພື່ອວ່າພວກເຂົາຈະບໍ່ຕ້ອງປະເຊີນກັບສາກນີ້ ແລະ ຈະບໍ່ມາສູ່ອັນຕະລາຍໃດໆ. ບາງຄົນ, ເມື່ອພວກເຂົາເຫັນພາບຟ້າແມບເຫຼື້ອມນີ້ ກໍມີຄວາມທຸກທີ່ອະທິບາຍບໍ່ໄດ້ຢູ່ໃນໃຈຂອງພວກເຂົາ ແລະ ຮູ້ສຶກເສຍໃຈຢ່າງສຸດຂີດ. ຖ້າພວກເຂົາຍັງຄົງປະພຶດຕົວໃນລັກສະນະນີ້, ມັນກໍຊ້າເກີນໄປສໍາລັບພວກເຂົາ. ໂອ, ທຸກສິ່ງ ແລະ ທຸກຢ່າງເອີຍ! ມັນຈະສໍາເລັດທັງໝົດ. ນີ້ກໍແມ່ນໜຶ່ງໃນວິທີການແຫ່ງຄວາມລອດພົ້ນຂອງເຮົາເຊັ່ນກັນ. ເຮົາຊ່ວຍຄົນທີ່ຮັກເຮົາໃຫ້ລອດພົ້ນ ແລະ ໂຈມຕີຄົນຊົ່ວຮ້າຍ, ເຮົາເຮັດໃຫ້ອານາຈັກຂອງເຮົາແນ່ວແນ່ ແລະ ໝັ້ນຄົງຢູ່ເທິງແຜ່ນດິນໂລກ ແລະ ເຮັດໃຫ້

ທຸກຊົນຊາດ ແລະ ທຸກຄົນ, ທຸກສິ່ງໃນຈັກກະວານ ແລະ ຈົນສຸດແຜ່ນດິນໂລກຮູ້ວ່າ ເຮົາສະຫງ່າຜ່າເຜີຍ, ເຮົາແມ່ນໄຟທີ່ລຸກໄໝ້, ເຮົາແມ່ນພຣະເຈົ້າຜູ້ທີ່ຄົ້ນຫາຫົວໃຈທີ່ຢູ່ໃນສຸດຂອງມະນຸດທຸກຄົນ. ນັບແຕ່ເວລານີ້ເປັນຕົ້ນໄປ, ການພິພາກສາຂອງບັນລັງຂາວອັນຍິ່ງໃຫຍ່ໄດ້ຖືກເປີດເຜີຍຢ່າງເປີດກວ້າງແກ່ມວນຊົນ ແລະ ແກ່ທຸກຄົນ, ມັນຖືກປະກາດວ່າການພິພາກສາໄດ້ເລີ່ມຂຶ້ນແລ້ວ! ມັນຢູ່ເໜືອຄວາມສົງໄສວ່າ ທຸກຄົນທີ່ມີຄໍາເວົ້າທີ່ບໍ່ຈິງໃຈ, ຜູ້ທີ່ສົງໄສ ແລະ ບໍ່ກ້າແນ່ໃຈ, ຜູ້ເສຍເວລາເຫຼົ່ານັ້ນທີ່ເຂົ້າໃຈຄວາມປາຖະໜາຂອງເຮົາ ແຕ່ບໍ່ເຕັມໃຈນໍາພວກມັນໄປປະຕິບັດ, ພວກເຂົາທຸກຄົນຕ້ອງຖືກພິພາກສາ. ພວກເຈົ້າຕ້ອງເອົາໃຈໃສ່ກວດສອບເຈດຕະນາ ແລະ ແຮງຈູງໃຈຂອງພວກເຈົ້າເອງ ແລະເຂົ້າຮັບຕໍາແໜ່ງທີ່ເໝາະສົມຂອງເຈົ້າ; ຈົ່ງປະຕິບັດຕາມພຣະທໍາຂອງເຮົາຢ່າງເອົາຈິງເອົາຈັງ, ເຫັນຄຸນຄ່າປະສົບການຊີວິດຂອງເຈົ້າ ແລະ ຢ່າກະທໍາດ້ວຍຄວາມກະຕືລືລົ້ນພຽງຜິວເຜີນ ແຕ່ຈົ່ງເຮັດໃຫ້ຊີວິດຂອງເຈົ້າເຕີບໃຫຍ່, ເປັນຜູ້ໃຫຍ່, ໝັ້ນຄົງ ແລະ ມີປະສົບການ, ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະເປັນຄົນທີ່ເປັນທີ່ພໍໃຈເຮົາ.

ຈົ່ງປະຕິເສດລູກສະໝຸນຂອງຊາຕານ ແລະ ວິນຍານຊົ່ວຮ້າຍທີ່ກໍ່ກວນ ແລະ ທໍາລາຍສິ່ງທີ່ເຮົາສ້າງໂອກາດ ເພື່ອໃຊ້ປະໂຫຍດຈາກສິ່ງຕ່າງໆເພື່ອພວກມັນ. ພວກມັນຕ້ອງຖືກຈໍາກັດຢ່າງເຂັ້ມງວດ ແລະ ຖືກຈໍາກັດໄວ້; ພວກມັນສາມາດຖືກຈັດການໄດ້ດ້ວຍດາບອັນແຫຼມຄົມເທົ່ານັ້ນ. ຜູ້ທີ່ບໍ່ດີທີ່ສຸດຈະຕ້ອງຖືກຖອນຮາກອອກໃນທັນທີ ເພື່ອປ້ອງກັນບັນຫາໃນອະນາຄົດ. ແລ້ວຄຣິສຕະຈັກຈະຖືກເຮັດໃຫ້ສົມບູນ, ປາສະຈາກຄວາມຜິດປົກກະຕິທັງປວງ ແລະ ມັນຈະມີສຸຂະພາບດີ, ເຕັມໄປດ້ວຍກໍາລັງ ແລະ ພະລັງ. ຫຼັງຈາກແສງຟ້າຜ່າ, ສຽງຟ້າຮ້ອງກໍດັງຂຶ້ນ. ເຈົ້າຕ້ອງບໍ່ລະເລີຍ ແລະ ເຈົ້າຕ້ອງບໍ່ຍອມແພ້, ແຕ່ເຮັດຈົນສຸດຄວາມສາມາດຂອງເຈົ້າເພື່ອນໍາໃຫ້ທັນ ແລະ ເຈົ້າຈະສາມາດເຫັນສິ່ງທີ່ມືຂອງເຮົາເຮັດ, ສິ່ງທີ່ເຮົາໝາຍວ່າຈະໄດ້ຮັບ, ສິ່ງທີເຮົາໝາຍວ່າຈະປະຖິ້ມ, ສິ່ງທີ່ເຮົາໝາຍວ່າຈະເຮັດໃຫ້ສົມບູນ, ສິ່ງທີ່ເຮົາໝາຍວ່າຈະຖອນຮາກ, ສິ່ງທີ່ເຮົາໝາຍວ່າຈະໂຈມຕີຢ່າງແນ່ນອນ, ທັງໝົດນີ້ຈະປາກົດຕໍ່ຕາຂອງພວກເຈົ້າ, ເຮັດໃຫ້ພວກເຈົ້າເຫັນອໍານາດອັນໄພສານຂອງເຮົາຢ່າງຊັດເຈນ.

ສຽງຟ້າຮ້ອງທັງເຈັດດັງກ້ອງແຕ່ບັນລັງຈົນເຖິງຈັກກະວານ ແລະ ສຸດປາຍແຜ່ນດິນໂລກ. ຄົນກຸ່ມໃຫຍ່ຈະຖືກຊ່ວຍໃຫ້ລອດພົ້ນ ແລະ ຈະຍອມຢູ່ຕໍ່ໜ້າບັນລັງຂອງເຮົາ. ຫຼັງຈາກແສງສະຫວ່າງແຫ່ງຊີວິດນີ້, ຜູ້ຄົນສະແຫວງຫາຫົນທາງທີ່ຈະເອົາຊີວິດລອດ ແລະ ບໍ່ສາມາດຊ່ວຍຫຍັງໄດ້ ນອກຈາກມາຫາເຮົາ, ຄຸເຂົ່າລົງນະມັດສະການ ແລະ ປາກຂອງພວກເຂົາຮ້ອງຫານາມຂອງອົງຊົງລິດທານຸພາບສູງສຸດ ພຣະເຈົ້າທີ່ແທ້ຈິງ ແລະ ສົ່ງສຽງອ້ອນວອນຂອງພວກເຂົາ. ແຕ່ບັນດາຜູ້ທີ່ຕໍ່ຕ້ານເຮົາ, ຜູ້ທີ່ເຮັດໃຫ້ຫົວໃຈຂອງຕົນແຂງກະດ້າງໄປ, ສຽງຟ້າຮ້ອງດັງກ້ອງຢູ່ໃນຫູຂອງພວກເຂົາ ແລະ ພວກເຂົາຕ້ອງພິນາດໄປຢ່າງບໍ່ຕ້ອງສົງໄສ. ນີ້ເປັນພຽງຜົນໄດ້ຮັບທີ່ຄອຍຖ້າພວກເຂົາ. ລູກຊາຍອັນເປັນທີ່ຮັກຂອງເຮົາຜູ້ທີ່ໄດ້ໄຊຊະນະຈະຢູ່ໃນຊີໂອນ ແລະ ທຸກຄົນຈະເຫັນສິ່ງທີ່ພວກເຂົາຈະໄດ້ຮັບ ແລະ ສະຫງ່າລາສີອັນຍິ່ງໃຫຍ່ຈະປາກົດຢູ່ຕໍ່ໜ້າພວກເຈົ້າ. ນີ້ຊ່າງເປັນພອນທີ່ຍິ່ງໃຫຍ່ແທ້ໆ ແລະ ມັນແມ່ນຄວາມຫວານທີ່ຍາກຈະບັນຍາຍ.

ສຽງດັ່ງປັ່ງຂອງຟ້າຮ້ອງທັງເຈັດທີ່ດັງອອກມາແມ່ນຄວາມລອດພົ້ນຂອງຜູ້ທີ່ຮັກເຮົາ, ຜູ້ທີ່ປາຖະໜາເຮົາດ້ວຍໃຈຈິງ. ຜູ້ທີ່ເປັນຂອງເຮົາ ແລະ ຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ຖືກເລືອກແມ່ນລ້ວນແລ້ວແຕ່ສາມາດຢູ່ພາຍໃຕ້ນາມຂອງເຮົາ. ພວກເຂົາສາມາດໄດ້ຍິນສຽງຂອງເຮົາ ເຊິ່ງແມ່ນພຣະເຈົ້າທີ່ຮຽກເອີ້ນພວກເຂົາ. ໃຫ້ຜູ້ທີ່ຢູ່ສຸດປາຍແຜ່ນດິນໂລກເຫັນວ່າເຮົາຊອບທຳ, ເຮົາຊື່ສັດ, ເຮົາມີຄວາມຮັກຄວາມເມດຕາ, ເຮົາມີຄວາມເຫັນອົກເຫັນໃຈ, ເຮົາສະຫງ່າຜ່າເຜີຍ, ເຮົາເປັນໄຟທີ່ລຸກໄໝ້ ແລະ ທ້າຍທີ່ສຸດ ເຮົາແມ່ນການພິພາກສາທີ່ໄຮ້ຄວາມເມດຕາ.

ໃຫ້ທຸກຄົນຢູ່ໃນໂລກເຫັນວ່າເຮົາແມ່ນພຣະເຈົ້າທີ່ແທ້ຈິງ ແລະ ສົມບູນແບບ. ມະນຸດທຸກຄົນເຊື່ອໝັ້ນຢ່າງເຕັມທີ່ ແລະ ບໍ່ມີໃຜກ້າຕໍ່ຕ້ານເຮົາອີກ ຫຼື ຕັດສິນເຮົາ ຫຼື ກ່າວຮ້າຍເຮົາອີກ. ບໍ່ດັ່ງນັ້ນ, ຄຳສາບແຊ່ງກໍຈະມາເຖິງພວກເຂົາທັນທີ ແລະ ໄພພິບັດກໍຈະເກີດຂຶ້ນກັບພວກເຂົາ. ພວກເຂົາເຮັດໄດ້ແຕ່ຮ້ອງໄຫ້ ແລະ ກັດແຂ້ວ, ໄດ້ນຳເອົາຄວາມພິນາດມາສູ່ຕົວພວກເຂົາເອງ.

ຈົ່ງໃຫ້ທຸກຄົນຮູ້, ໃຫ້ມັນເປັນທີ່ຮູ້ຈັກທົ່ວທັງຈັກກະວານ ແລະ ຈົນສຸດປາຍແຜ່ນດິນໂລກ, ໃນທຸກຄົວເຮືອນ ແລະ ໂດຍທຸກຄົນວ່າ: ພຣະເຈົ້າອົງຊົງລິດທານຸພາບສູງສຸດແມ່ນພຣະເຈົ້າທີ່ແທ້ຈິງແຕ່ອົງດຽວ. ທຸກຄົນຈະຄຸເຂົ່າລົງ ແລະ ນະມັດສະການເຮົາເທື່ອລະຄົນ ແລະ ແມ່ນແຕ່ເດັກນ້ອຍຜູ້ຫາກໍຮຽນເວົ້າຈະຮ້ອງອອກວ່າ "ພຣະເຈົ້າອົງຊົງລິດທານຸພາບສູງສຸດ"! ເຈົ້າໜ້າທີ່ເຫຼົ່ານັ້ນຜູ້ທີ່ມີອຳນາດຈະເຫັນດ້ວຍຕາຂອງພວກເຂົາເອງເຊັ່ນກັນວ່າພຣະເຈົ້າທີ່ແທ້ຈິງກຳລັງປາກົດຕົວຢູ່ຕໍ່ໜ້າພວກເຂົາ ແລະ ພວກເຂົາຍັງຈະກົ້ມຂາບລົງນະມັດສະການນຳອີກ, ວອນຂໍຄວາມເມດຕາ ແລະ ການໃຫ້ອະໄພ, ແຕ່ນີ້ກໍຊ້າເກີນໄປແລ້ວແທ້ໆ ເພາະວ່າເວລາແຫ່ງການຕາຍຂອງພວກເຂົາໄດ້ມາຮອດແລ້ວ. ພວກເຂົາພຽງແຕ່ສາມາດຖືກເຮັດຈິບສິ້ນ ແລະ ຖືກຕັດສິນໃຫ້ລົງເຫວເລິກທີ່ບໍ່ສາມາດຢັ່ງເຖິງໄດ້. ເຮົາຈະນຳຍຸກທັງໝົດມາສູ່ຈຸດຈົບ ແລະ ເສີມສ້າງອານາຈັກຂອງເຮົາໃຫ້ເຂັ້ມແຂງຍິ່ງຂຶ້ນ. ທຸກຊົນຊາດ ແລະ ທຸກຄົນຈະຍອມຢູ່ຕໍ່ໜ້າເຮົາຕະຫຼອດນິລັນດອນ!

# ບົດທີ 36

ພຣະເຈົ້າອົງຊົງລິດທານຸພາບສູງສຸດທີ່ແທ້ຈິງ ຜູ້ເປັນກະສັດທີ່ຂຶ້ນຄອງບັນລັງ, ປົກຄອງຈັກກະວານທັງປວງ, ຢູ່ຕໍ່ໜ້າບັນດາປະຊາຊາດ ແລະ ຜູ້ຄົນທັງປວງ ແລະ ທຸກສິ່ງທີ່ຢູ່ພາຍໃຕ້ສະຫວັນກໍສ່ອງແສງດ້ວຍສະຫງ່າລາສີຂອງພຣະເຈົ້າ. ທຸກສິ່ງທີ່ມີຊີວິດໃນຈັກກະວານ ແລະ ຈົນສຸດຂອບແຜ່ນດິນໂລກກໍຈະໄດ້ເຫັນ. ພູເຂົາ, ແມ່ນໍ້າ, ທະເລສາບ, ແຜ່ນດິນ, ມະຫາສະໝຸດ ແລະ ທຸກສິ່ງທີ່ມີຊີວິດໄດ້ເປີດຜ້າກັ້ງຂອງພວກເຂົາອອກຍ້ອນໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ແລະ ພວກເຂົາກໍມີຊີວິດຊີວາຄືກັບວ່າກໍາລັງຕື່ນຈາກຄວາມຝັນ, ຄືກັບວ່າພວກເຂົາເປັນໜໍ່ທີ່ແຕກອອກມາຈາກດິນ!

ອ່າ! ພຣະເຈົ້າທີ່ແທ້ຈິງພຽງອົງດຽວປາກົດຕໍ່ໜ້າແຜ່ນດິນໂລກ. ຜູ້ໃດກ້າເຂົ້າຫາພຣະອົງດ້ວຍຄວາມຕໍ່ຕ້ານບໍ່? ທຸກຄົນສັ່ນດ້ວຍຄວາມຢ້ານກົວ. ທຸກຄົນໄດ້ເຊື່ອທັງໝົດ ແລະ ທຸກຄົນອ້ອນວອນຂໍການໃຫ້ອະໄພໂທດຊໍ້າແລ້ວຊໍ້າອີກ. ທຸກຄົນຄຸເຂົ່າລົງຕໍ່ໜ້າພຣະອົງ ແລະ ທຸກປາກກໍນະມັດສະການພຣະອົງ! ທະວີບ ແລະ ມະຫາສະໝຸດ, ພູເຂົາ, ແມ່ນໍ້າ, ທຸກສິ່ງສັນລະເສີນພຣະອົງໂດຍບໍ່ສິ້ນສຸດ! ລະດູໃບໄມ້ປົ່ງມາພ້ອມກັບລົມພັດເບົາໆທີ່ອົບອຸ່ນ, ກໍ່ໃຫ້ເກີດຝົນລະດູໃບໄມ້ປົ່ງທີ່ງົດງາມ. ເຊັ່ນດຽວກັບຜູ້ຄົນ, ກະແສນໍ້າໄຫຼດ້ວຍຄວາມໂສກເສົ້າ ແລະ ຄວາມປິຕິຍິນດີ, ຫຼັ່ງນໍ້າຕາແຫ່ງຄວາມເປັນໜີ້ບຸນຄຸນ ແລະ ການຕໍາໜິຕົນເອງ. ແມ່ນໍ້າ, ທະເລສາບ, ຟອງນໍ້າ ແລະ ຄື້ນລ້ອນແລ້ວແຕ່ຮ້ອງເພງ, ຍົກຍ້ອງສັນລະເສີນນາມບໍລິສຸດຂອງພຣະເຈົ້າທີ່ແທ້ຈິງ! ສຽງສັນລະເສີນເປັ່ງອອກດ້ວຍຄວາມກະຈ່າງແຈ້ງເຫຼືອເກີນ! ສິ່ງເດີມໆທີ່ເຄີຍຖືກຊາຕານເຮັດໃຫ້ເສື່ອມຊາມຄັ້ງໜຶ່ງ, ທຸກໆສິ່ງເຫຼົ່ານັ້ນຈະເລີ່ມຕົ້ນໃໝ່ ແລະ ຖືກປ່ຽນແປງ ແລະ ເຂົ້າສູ່ໂລກໃໝ່ທັງສິ້ນ...

ນີ້ແມ່ນແກອັນບໍລິສຸດ ແລະ ມັນກໍເລີ່ມສົ່ງສຽງ! ຕັ້ງໃຈຟັງມັນ. ສຽງນັ້ນທີ່ຫວານຫຼາຍແມ່ນຖ້ອຍຄໍາແຫ່ງບັນລັງ, ປະກາດໃຫ້ບັນດາປະຊາຊາດ ແລະ ຜູ້ຄົນວ່າ ເວລາໄດ້ມາເຖິງແລ້ວ, ການສິ້ນສຸດຄັ້ງສຸດທ້າຍໄດ້ມາເຖິງແລ້ວ. ແຜນການຄຸ້ມຄອງຂອງເຮົາໄດ້ສໍາເລັດແລ້ວ. ອານາຈັກຂອງເຮົາໄດ້ປາກົດຂຶ້ນຢ່າງເປີດເຜີຍເທິງແຜ່ນດິນໂລກ. ອານາຈັກເທິງໂລກໄດ້ກາຍມາເປັນອານາຈັກຂອງເຮົາ ຜູ້ທີ່ເປັນພຣະເຈົ້າ. ແກທັງເຈັດຂອງເຮົາກໍສົ່ງສຽງດັງກ້ອງອອກຈາກບັນລັງ ແລະ ສິ່ງທີ່ມະຫັດສະຈັນດັ່ງກ່າວກໍຈະເກີດຂຶ້ນ! ຜູ້ຄົນສຸດຂອບແຜ່ນດິນໂລກຈະຮີບມາພ້ອມກັນຈາກທຸກທິດທາງດ້ວຍກໍາລັງຂອງຫິມະຖະຫຼົ່ມ ແລະ ພະລັງຂອງສາຍຟ້າແມບ, ບາງຄົນກໍຂີ່ເຮືອໃນທະເລ, ບາງຄົນຂີ່ເຮືອບິນ, ບາງຄົນຂີ່ຍານພະຫະນະທຸກຮູບແບບ ແລະ ທຸກຂະໜາດ, ບາງຄົນກໍຂີ່ເທິງຫຼັງມ້າ. ໃຫ້ເບິ່ງໃກ້ໆ. ໃຫ້ຟັງຢ່າງລະມັດລະວັງ. ຜູ້ຂີ່ມ້າທຸກສີເຫຼົ່ານີ້ ທີ່ປຸກຈິດວິນຍານ, ຍິ່ງໃຫຍ່ ແລະ ສະຫງ່າງາມ, ຄືກັບວ່າກໍາລັງອອກໄປສູ່ສະໜາມຮົບ ແມ່ນບໍ່ສົນໃຈຄວາມຕາຍເລີຍ. ທ່າມກາງສຽງຮ້ອງຂອງມ້າ ແລະ ສຽງວຸ້ນວາຍຂອງຜູ້ຄົນທີ່ຮ້ອງຂຶ້ນຫາພຣະເຈົ້າທີ່ແທ້ຈິງ, ຜູ້ຊາຍຫຼາຍຄົນ, ແມ່ຍິງ ແລະ ເດັກນ້ອຍຈະຖືກຢຽບຢໍ່າດ້ວຍຕີນຂອງມ້າທັນທີ. ບາງຄົນຈະຕາຍ, ບາງຄົນຈະຫາຍໃຈເປັນຄັ້ງສຸດທ້າຍ, ບາງຄົນຈະຖືກໜີບຮັດ, ບໍ່ມີຜູ້ໃດມາເບິ່ງແຍງ, ຮ້ອງຂຶ້ນໂດຍບໍ່ຢຸດຢັ້ງ, ເຫົ່າຫອນດ້ວຍຄວາມເຈັບປວດ. ລູກຊາຍແຫ່ງ

ຄວາມກະບົດເອີຍ! ນີ້ບໍ່ແມ່ນຜົນຕາມມາສຸດທ້າຍຂອງພວກເຈົ້າບໍ?

ເຮົາຫຼຽວເບິ່ງດ້ວຍຄວາມປິຕິຍິນດີກັບປະຊາຊົນຂອງເຮົາ ຜູ້ທີ່ຟັງສຽງຂອງເຮົາ ແລະ ຊຸມນຸມກັນຈາກທຸກຊົນຊາດ ແລະ ດິນແດນ. ທຸກຄົນທີ່ຮັກສາພຣະເຈົ້າທີ່ແທ້ຈິງໄວ້ໃນປາກຂອງພວກເຂົາ ສັນລະເສີນ ແລະ ໂດດຂຶ້ນດ້ວຍຄວາມປິຕິຍິນດີໂດຍບໍ່ຢຸດຢັ້ງ! ພວກເຂົາເປັນພະຍານໃຫ້ແກ່ໂລກ ແລະ ສຽງຄຳພະຍານຂອງພວກເຂົາຕໍ່ກັບພຣະເຈົ້າທີ່ແທ້ຈິງກໍເປັນຄືກັບສຽງຟ້າຮ້ອງຂອງນໍ້າຫຼາຍສາຍ. ທຸກຄົນຈະຫຸ້ມກັນເຂົ້າສູ່ອານາຈັກຂອງເຮົາ.

ແກທັງເຈັດຂອງເຮົາສົ່ງສຽງດັງ, ປຸກຄົນທີ່ນອນຫຼັບຢູ່ໃຫ້ຕື່ນຂຶ້ນ! ຈົ່ງຕື່ນໄວໆ, ມັນບໍ່ໄດ້ຊ້າເກີນໄປ. ເບິ່ງຊີວິດຂອງເຈົ້າ! ມືນຕາຂອງເຈົ້າ ແລະ ເບິ່ງວ່າຕອນນີ້ແມ່ນເວລາເທົ່າໃດແລ້ວ. ມີຫຍັງໃຫ້ສະແຫວງຫາບໍ? ມີຫຍັງໃຫ້ຄິດເຖິງບໍ? ແລ້ວມີຫຍັງໃຫ້ຍຶດຕິດບໍ? ເຈົ້າບໍ່ເຄີຍພິຈາລະນາເຖິງຄວາມແຕກຕ່າງໃນຄຸນຄ່າລະຫວ່າງການໄດ້ຮັບຊີວິດຂອງເຮົາ ແລະ ການໄດ້ຮັບທຸກສິ່ງທີ່ເຈົ້າຮັກ ແລະ ຍຶດຕິດບໍ? ຢ່າຫົວແຂງ ຫຼື ລ່າເລີ່ງອີກຕໍ່ໄປ. ຢ່າພາດໂອກາດນີ້. ເວລາແບບນີ້ຈະບໍ່ມາອີກຄັ້ງ! ໃຫ້ຍືນຂຶ້ນທັນທີ, ປະຕິບັດການໃຊ້ວິນຍານຂອງເຈົ້າ, ໃຊ້ຫຼາກຫຼາຍເຄື່ອງມືເພື່ອເບິ່ງທະລຸ ແລະ ຂັດຂວາງກົນອຸບາຍ ແລະ ກົນລວງທັງໝົດຂອງຊາຕານ ແລະ ເອົາໄຊຊະນະເໜືອຊາຕານ, ເພື່ອວ່າປະສົບການໃນຊີວິດຂອງເຈົ້າອາດເລິກເຊິ່ງຂຶ້ນ ແລະ ເຈົ້າອາດດຳລົງຊີວິດຕາມອຸປະນິໄສຂອງເຮົາ, ເພື່ອວ່າຊີວິດຂອງເຈົ້າອາດເປັນຜູ້ໃຫຍ່ ແລະ ມີປະສົບການ ແລະ ເຈົ້າອາດຕິດຕາມບາດກ້າວຂອງເຮົາຢ່າງໃກ້ຊິດສະເໝີ. ໂດຍບໍ່ສະທ້ານ, ບໍ່ອ່ອນແອ, ກ້າວໄປຂ້າງໜ້າຢູ່ສະເໝີ, ເທື່ອລະກ້າວ, ຊື່ກົງຈົນເຖິງສຸດປາຍທາງ!

ເມື່ອແກທັງເຈັດດັງຂຶ້ນອີກຄັ້ງ, ມັນຈະເປັນການເອີ້ນສູ່ການພິພາກສາ, ການພິພາກສາຂອງລູກຊາຍແຫ່ງຄວາມກະບົດ, ການພິພາກສາບັນດາປະຊາຊາດ ແລະ ຜູ້ຄົນທັງປວງ ແລະ ແຕ່ລະຊົນຊາດຈະຍອມຈຳນົນຢູ່ຕໍ່ໜ້າພຣະເຈົ້າ. ໃບໜ້າທີ່ມີສະຫງ່າລາສີຂອງພຣະເຈົ້າຈະປາກົດຕໍ່ໜ້າບັນດາປະຊາຊາດ ແລະ ຜູ້ຄົນທັງປວງຢ່າງແນ່ນອນ. ທຸກຄົນຈະເຊື່ອຢ່າງສິ້ນເຊີງ ແລະ ຮ້ອງອອກຢ່າງບໍ່ຢຸດຢັ້ງຫາພຣະເຈົ້າທີ່ແທ້ຈິງ. ພຣະເຈົ້າອົງຊົງລິດທານຸພາບສູງສຸດຈະມີສະຫງ່າລາສີຫຼາຍຂຶ້ນ ແລະ ບຸດຊາຍຂອງເຮົາ ແລະ ເຮົາຈະຮ່ວມມີສະຫງ່າລາສີ ແລະ ຮ່ວມໃນຄວາມເປັນກະສັດ, ພິພາກສາບັນດາປະຊາຊາດ ແລະ ຜູ້ຄົນທັງປວງ, ລົງໂທດຄົນຊົ່ວຮ້າຍ, ຊ່ວຍໃຫ້ລອດພົ້ນ ແລະ ມີຄວາມເມດຕາຕໍ່ຄົນທີ່ເປັນຂອງເຮົາ ແລະ ເຮັດໃຫ້ອານາຈັກເຂັ້ມແຂງ ແລະ ໝັ້ນຄົງ. ຜ່ານສຽງແກທັງເຈັດ, ຜູ້ຄົນຈຳນວນຫຼວງຫຼາຍຈະຖືກຊ່ວຍໃຫ້ລອດພົ້ນ, ກັບຄືນມາຢູ່ຕໍ່ໜ້າເຮົາເພື່ອຄຸເຂົ່າ ແລະ ນະມັດສະການດ້ວຍຄຳສັນລະເສີນຢ່າງຕໍ່ເນື່ອງ!

ເມື່ອແກທັງເຈັດສົ່ງສຽງຂຶ້ນອີກຄັ້ງ, ມັນຈະເປັນສຽງຕອນຈົບແຫ່ງຍຸກ, ການເປົ່າແກແຫ່ງໄຊຊະນະເໜືອຊາຕານທີ່ຊົ່ວຮ້າຍ, ການຄຳນັບທີ່ປ່າວປະກາດການເລີ່ມຕົ້ນແຫ່ງການດຳລົງຊີວິດຢ່າງເປີດເຜີຍໃນອານາຈັກເທິງແຜ່ນດິນໂລກ! ສຽງນັ້ນຊ່າງສູງສົ່ງ, ສຽງນີ້ດັງກ້ອງທົ່ວບໍລິເວນບັນລັງ, ການເປົ່າແກນີ້ສັ່ນສະເທືອນສະຫວັນ ແລະ ແຜ່ນດິນໂລກ ເຊິ່ງເປັນສັນຍານແຫ່ງໄຊຊະນະຂອງແຜນການຄຸ້ມຄອງຂອງເຮົາ, ເຊິ່ງເປັນການພິພາກສາຂອງຊາຕານ; ມັນຕັດສິນລົງໂທດແຜ່ນດິນໂລກເກົ່າໃຫ້ຕາຍໄປທັງໝົດ, ກັບຄືນສູ່ຂຸມເລິກທີ່ສຸດ! ການເປົ່າແກນີ້ເປັນສັນຍານວ່າ ປະຕູແຫ່ງຄວາມ

ກະລຸນາກຳລັງຈະອັດແລ້ວ, ຊີວິດແຫ່ງອານາຈັກຈະເລີ່ມຕົ້ນຂຶ້ນເທິງແຜ່ນດິນໂລກ ເຊິ່ງຖືກຕ້ອງ ແລະ ເໝາະສົມ. ພຣະເຈົ້າຊ່ວຍຄົນທີ່ຮັກພຣະອົງໃຫ້ລອດພົ້ນ. ຫຼັງຈາກທີ່ພວກເຂົາກັບຄືນສູ່ອານາຈັກຂອງພຣະອົງ, ຜູ້ຄົນເທິງແຜ່ນດິນໂລກຈະປະສົບກັບຄວາມອຶດຢາກ ແລະ ໂລກລະບາດ ແລະ ຂັນທັງເຈັດໜ່ວຍຂອງພຣະເຈົ້າ ແລະ ໂລກລະບາດທັງເຈັດຈະເກີດຂຶ້ນຕາມມາ. ສະຫວັນ ແລະ ແຜ່ນດິນໂລກຈະລ່ວງໄປ, ແຕ່ພຣະທຳຂອງເຮົາຈະບໍ່ເປັນເຊັ່ນນັ້ນ!

# ບົດທີ 37

ພວກເຈົ້າຂາດຄວາມເຊື່ອໃນການສະຖິດຂອງເຮົາແທ້ໆ ແລະ ມັກເພິ່ງພາຕົນເອງໃນການເຮັດສິ່ງຕ່າງໆຢູ່ສະເໝີ. “ຫາກປາສະຈາກເຮົາແລ້ວ ພວກເຈົ້າບໍ່ສາມາດເຮັດຫຍັງໄດ້ເລີຍ!” ແຕ່ພວກເຈົ້າ ຄົນທີ່ເສື່ອມຊາມ ເອົາພຣະທຳຂອງເຮົາເຂົ້າຫູຂ້າງໜຶ່ງແລ້ວອອກອີກຂ້າງໜຶ່ງຢູ່ຕະຫຼອດເວລາ. ຊີວິດໃນປັດຈຸບັນຄືຊີວິດແຫ່ງພຣະທຳ; ຫາກປາສະຈາກພຣະທຳກໍຈະບໍ່ມີຊີວິດ, ບໍ່ມີປະສົບການ ແລະ ແມ່ນແຕ່ຄວາມເຊື່ອກໍຈະບໍ່ມີ. ຄວາມເຊື່ອຢູ່ໃນພຣະທຳ; ພຽງແຕ່ເຈົ້າເອົາໃຈໃສ່ກັບພຣະທຳຂອງພຣະເຈົ້າຫຼາຍຂຶ້ນເທົ່ານັ້ນ ເຈົ້າຈຶ່ງສາມາດມີທຸກສິ່ງໄດ້. ຢ່າກັງວົນວ່າເຈົ້າຈະບໍ່ເຕີບໃຫຍ່; ຊີວິດມາຈາກການເຕີບໃຫຍ່, ບໍ່ແມ່ນຈາກຄວາມກັງວົນ.

ພວກເຈົ້າມັກຈະກັງວົນໃຈ ແລະ ບໍ່ຟັງຄຳສັ່ງສອນຂອງເຮົາ. ເຈົ້າຕ້ອງການກ້າວເດີນໄວກວ່າບາດກ້າວຂອງເຮົາຢູ່ສະເໝີ. ນີ້ແມ່ນຫຍັງແທ້? ມັນແມ່ນຄວາມທະເຍີທະຍານຢ່າງເພີ້ຝັນຂອງມະນຸດ. ເຈົ້າຄວນແຍກແຍະໃຫ້ຊັດເຈນລະຫວ່າງສິ່ງທີ່ມາຈາກພຣະເຈົ້າ ແລະ ສິ່ງທີ່ມາຈາກເຈົ້າເອງ. ຄວາມກະຕືລືລົ້ນຈະບໍ່ຖືກຍົກຍ້ອງຢູ່ຕໍ່ໜ້າເຮົາຈັກເທື່ອ. ເຮົາຕ້ອງການໃຫ້ພວກເຈົ້າສາມາດຕິດຕາມເຮົາຢ່າງຈິງໃຈຕັ້ງແຕ່ຕົ້ນຈົນຈົບ ໂດຍບໍ່ມີການປ່ຽນແປງຄວາມຈົງຮັກພັກດີແມ່ນແຕ່ໜ້ອຍເລີຍ. ເຈົ້າເຊື່ອວ່າການປະພຶດໃນລັກສະນະນີ້ແມ່ນການອຸທິດໃຫ້ກັບພຣະເຈົ້າ. ມະນຸດຕາບອດເອີຍ! ເປັນຫຍັງເຈົ້າຈຶ່ງບໍ່ມາຢູ່ຕໍ່ໜ້າເຮົາຫຼາຍກວ່ານີ້ເພື່ອສະແຫວງຫາ, ແຕ່ກັບຈົມປັກຢູ່ກັບຕົວເອງ? ເຈົ້າຕ້ອງເຫັນຢ່າງຈະແຈ້ງ! ຄົນທີ່ກຳລັງປະຕິບັດພາລະກິດໃນຕອນນີ້ບໍ່ແມ່ນມະນຸດຢ່າງແນ່ນອນ, ແຕ່ກົງກັນຂ້າມ ແມ່ນພຣະຜູ້ປົກຄອງສັບພະສິ່ງທັງປວງ ເຊິ່ງເປັນພຣະເຈົ້າທີ່ແທ້ຈິງພຽງອົງດຽວ ນັ້ນກໍຄື ອົງຊົງລິດທານຸພາບສູງສຸດ! ເຈົ້າຕ້ອງບໍ່ເບິ່ງຂ້າມ, ແຕ່ກົງກັນຂ້າມ ຕ້ອງຍຶດໝັ້ນກັບທຸກສິ່ງທີ່ພວກເຈົ້າມີຢູ່ສະເໝີ ເພາະວ່າມື້ຂອງເຮົາໃກ້ເຂົ້າມາແລ້ວ. ບັດນີ້ ພວກເຈົ້າຍັງບໍ່ຕື່ນໃນເວລາແບບນີ້ອີກບໍ? ພວກເຈົ້າຍັງບໍ່ເຫັນຢ່າງແຈ່ມແຈ້ງບໍ? ພວກເຈົ້າຍັງພົວພັນຢູ່ກັບໂລກ ແລະ ບໍ່ສາມາດແຍກອອກຈາກມັນໄດ້. ເປັນຫຍັງ? ເຈົ້າຮັກເຮົາແທ້ບໍ? ເຈົ້າສາມາດເປີດຫົວໃຈຂອງເຈົ້າໃຫ້ເຮົາເຫັນໄດ້ບໍ? ເຈົ້າສາມາດມອບຄວາມເປັນຢູ່ທັງໝົດຂອງເຈົ້າໃຫ້ກັບເຮົາໄດ້ບໍ?

ຈົ່ງຄິດເຖິງພຣະທຳຂອງເຮົາຫຼາຍກວ່ານີ້ ແລະ ມີຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບພຣະທຳເຫຼົ່ານັ້ນຢູ່ສະເໝີ. ຢ່າສັບສົນ ຫຼື ສອງຈິດສອງໃຈ. ຈົ່ງໃຊ້ເວລາໃນການສະຖິດຂອງເຮົາຫຼາຍຂຶ້ນ, ຮັບເອົາພຣະທຳທີ່ບໍລິສຸດຂອງເຮົາໃຫ້ຫຼາຍຂຶ້ນ ແລະ ຢ່າເຂົ້າໃຈເຈດຕະນາຂອງເຮົາຜິດ. ມີຫຍັງອີກແດ່ທີ່ພວກເຈົ້າຕ້ອງການໃຫ້ເຮົາເວົ້າກັບພວກເຈົ້າ? ຫົວໃຈຂອງຜູ້ຄົນແຂງກະດ້າງ ແລະ ຄວາມຄິດຂອງຜູ້ຄົນກໍຈິງຈັງເກີນໄປ. ພວກເຂົາຄິດຢູ່ສະເໝີວ່າ ມີຊີວິດແບບບໍ່ທຸກໃຈກໍພຽງພໍແລ້ວ ແລະ ພວກເຂົາເຮັດໃຫ້ຊີວິດຂອງພວກເຂົາເປັນເລື່ອງຕະຫຼົກຢູ່ສະເໝີ. ເດັກນ້ອຍທີ່ໂງ່ຈ້າເອີຍ! ເວລາບໍ່ໄດ້ຊັກຊ້າ, ມັນບໍ່ແມ່ນເວລາທີ່ຈະຫຼິ້ນຢູ່ລ້າໆ. ເຈົ້າຄວນມືນຕາຂອງເຈົ້າ ແລະ ເບິ່ງວ່າມັນຈັກໂມງແລ້ວ. ດວງຕາເວັນໃກ້ຈະຜ່ານຂອບຟ້າ ແລະ ສ່ອງແສງສະຫວ່າງໃຫ້ກັບແຜ່ນດິນໂລກ. ມືນຕາຂອງເຈົ້າ ແລະ ເບິ່ງໃຫ້ດີ, ຢ່າປະໝາດ.

ນີ້ເປັນເລື່ອງໃຫຍ່, ແຕ່ພວກເຈົ້າກັບຖືເບົາ ແລະ ປະຕິບັດຕໍ່ມັນແບບນີ້! ເຮົາກັງວົນໃຈ, ແຕ່ມີໜ້ອຍຄົນທີ່ຄິດເຖິງຫົວໃຈຂອງເຮົາ ແລະ ສາມາດໄດ້ຍິນການຕັກເຕືອນທີ່ດີຂອງເຮົາ ແລະ ຟັງຄຳແນະນຳຂອງເຮົາ! ພາລະກິດແມ່ນຍາກຫຼາຍ, ແຕ່ມີໜ້ອຍຄົນທ່າມກາງພວກເຈົ້າທີ່ສາມາດແບ່ງປັນພາລະກັບເຮົາໄດ້; ເຈົ້າຍັງມີທ່າທີແບບນີ້. ເຖິງແມ່ນວ່າເຈົ້າມີຄວາມກ້າວໜ້າ ເມື່ອທຽບກັບອະດີດ, ແຕ່ເຈົ້າບໍ່ສາມາດຄົງຢູ່ກັບສະພາບແບບນີ້! ບາດກ້າວຂອງເຮົາກ້າວໄປຂ້າງໜ້າຢ່າງໄວວາ, ແຕ່ພວກເຈົ້າຍັງຢູ່ໃນບາດກ້າວແບບນີ້. ເຈົ້າຈະນຳທັນແສງສະຫວ່າງແຫ່ງປັດຈຸບັນ ແລະ ບາດກ້າວຂອງເຮົາໄດ້ແນວໃດ? ຢ່າລັງເລໃຈອີກເລີຍ. ເຮົາໄດ້ເວົ້າຢໍ້າກັບພວກເຈົ້າຊໍ້າແລ້ວຊໍ້າອີກ, ມື້ຂອງເຮົາຈະບໍ່ໄດ້ລໍຊ້າອີກຕໍ່ໄປ!

ແສງສະຫວ່າງໃນມື້ນີ້ກໍສຳລັບມື້ນີ້. ມັນບໍ່ສາມາດປຽບທຽບກັບແສງສະຫວ່າງຂອງມື້ວານນີ້ໄດ້ ແລະ ມັນບໍ່ສາມາດປຽບທຽບກັບແສງສະຫວ່າງໃນມື້ຕໍ່ໄປໄດ້. ການເປີດເຜີຍໃໝ່ ແລະ ແສງສະຫວ່າງໃໝ່ແມ່ນກ້າຂຶ້ນໃນແຕ່ລະມື້ ແລະ ແຈ້ງຂຶ້ນໃນແຕ່ລະມື້. ຢ່າມືນງົງອີກຕໍ່ໄປ, ຢ່າໂງ່ອີກຕໍ່ໄປເລີຍ, ຢ່າຫົວໂບຮານອີກເລີຍ, ຢ່າຫ່ວງດຶງເວລາຂອງເຮົາອີກເລີຍ ຫຼື ເຮັດໃຫ້ເຮົາເສຍເວລາຢ່າງໄຮ້ປະໂຫຍດ.

ລະວັງ! ລະວັງຕົວໃຫ້ດີ! ຈົ່ງອະທິຖານຫາເຮົາຫຼາຍຂຶ້ນ, ຈົ່ງໃຊ້ເວລາຢູ່ຕໍ່ໜ້າເຮົາຫຼາຍຂຶ້ນ ແລະ ເຈົ້າຈະໄດ້ຮັບທຸກສິ່ງຢ່າງແນ່ນອນ! ຈົ່ງເຊື່ອວ່າ ດ້ວຍວິທີນີ້ ເຈົ້າຈະໄດ້ຮັບທຸກສິ່ງ ຢ່າງແນ່ນອນ!

# ບົດທີ 38

ບໍ່ແມ່ນວ່າຄວາມເຊື່ອຂອງເຈົ້າດີ ຫຼື ບໍລິສຸດ, ແຕ່ກົງກັນຂ້າມ ພາລະກິດຂອງເຮົາອັດສະຈັນ! ທຸກສິ່ງເປັນໄປຍ້ອນຄວາມເມດຕາຂອງເຮົາ! ເຈົ້າຕ້ອງບໍ່ມີອຸປະນິໄສທີ່ເສື່ອມຊາມໃນການເຫັນແກ່ຕົວ ຫຼື ຄວາມອວດດີແມ່ນແຕ່ໜ້ອຍດຽວ, ບໍ່ດັ່ງນັ້ນ ເຮົາຈະບໍ່ປະຕິບັດພາລະກິດໃນຕົວເຈົ້າ. ເຈົ້າຕ້ອງເຂົ້າໃຈຢ່າງແຈ່ມແຈ້ງວ່າ ການທີ່ມະນຸດຈະລົ້ມລົງ ຫຼື ຢືນຢ່າງເຂັ້ມແຂງນັ້ນບໍ່ແມ່ນຍ້ອນພວກເຂົາ; ແຕ່ມັນເປັນຍ້ອນເຮົາ. ໃນປັດຈຸບັນ, ຖ້າເຈົ້າບໍ່ເຂົ້າໃຈຂັ້ນຕອນນີ້ຢ່າງແຈ່ມແຈ້ງ, ເຈົ້າກໍຈະລົ້ມເຫຼວໃນການເຂົ້າສູ່ອານາຈັກ! ເຈົ້າຕ້ອງເຂົ້າໃຈວ່າ ສິ່ງທີ່ຖືກເຮັດໃນປັດຈຸບັນແມ່ນພາລະກິດທີ່ອັດສະຈັນຂອງພຣະເຈົ້າ; ມັນບໍ່ກ່ຽວຂ້ອງກັບມະນຸດເລີຍ. ການກະທຳຂອງມະນຸດມີປະໂຫຍດຫຍັງແດ່? ເມື່ອພວກເຂົາບໍ່ເຫັນແກ່ຕົວ, ອວດດີ ແລະ ໂອຫັງ, ພວກເຂົາກໍຈະຂັດຂວາງການຄຸ້ມຄອງຂອງພຣະເຈົ້າ ແລະ ທຳລາຍແຜນການຂອງພຣະອົງ. ໂອ ຄົນເສື່ອມຊາມທັງຫຼາຍ! ເຈົ້າຕ້ອງມາເພິ່ງພາເຮົາໃນມື້ນີ້; ຖ້າເຈົ້າບໍ່ມາ, ມື້ນີ້ ເຮົາຈະບອກກັບເຈົ້າວ່າ ເຈົ້າຈະບໍ່ບັນລຸຫຍັງຈັກເທື່ອ! ທຸກສິ່ງຈະສູນເປົ່າ ແລະ ກິດຈະການຂອງເຈົ້າກໍຈະບໍ່ມີຄ່າຫຍັງເລີຍ!

ຢ່າຫ່ວງດົງເວລາ ຫຼື ລັງເລໃຈ; ໃນປັດຈຸບັນ ແຕ່ລະຄົນທີ່ຮັກເຮົາຈະໄດ້ຮັບພາລະກິດຢ່າງອັດສະຈັນຂອງເຮົາທີ່ປະຕິບັດຢູ່ໃນພວກເຂົາ. ເຮົາຈະບໍ່ໃຊ້ຄົນທີ່ບໍ່ຖ່ອມຕົວ ແລະ ໃນປັດຈຸບັນນີ້ ເຮົາຈະໃຊ້ພຽງແຕ່ຄົນທີ່ຖ່ອມຕົວໂດຍແທ້. ເຮົາຈະເປີດເຜີຍຢ່າງເຕັມທີ່ກັບເຈົ້າທີ່ຮັກເຮົາດ້ວຍໃຈຈິງ, ຄົນທີ່ຖືກຄົນອື່ນດູຖູກ ແລະ ຄົນທີ່ສາມາດເປີດເຜີຍຕົນເອງກັບເຮົາຢ່າງແທ້ຈິງ. ເຮົາຈະໃຫ້ເຈົ້າເຂົ້າໃຈເຈດຕະນາຂອງເຮົາ ແລະ ເຈົ້າຈະຢູ່ຕໍ່ໜ້າເຮົາເພື່ອຮັບພອນຈາກເຮົາຕະຫຼອດເວລາ. ໃນປັດຈຸບັນ, ເຮົາຈະບໍ່ປະຕິບັດກັບຄົນທີ່ເສຍສະຫຼະຕົນເອງເພື່ອເຮົາ, ຖວາຍຕົນເອງໃຫ້ກັບເຮົາ ແລະ ແບກຮັບພາລະເພື່ອເຮົາແບບບໍ່ຍຸຕິທຳ ເຊິ່ງດ້ວຍເຫດນັ້ນ ຄວາມຊອບທຳຂອງເຮົາກໍຈະຖືກເປີດເຜີຍອອກ. ຢ່າຕໍ່ວ່າກ່ຽວກັບເຮົາເລີຍ; ຄວາມເມດຕາຂອງເຮົາກໍພຽງພໍສຳລັບພວກເຈົ້າແລ້ວ. ເຈົ້າຄວນຈະມາ ແລະ ຮັບເອົາຄວາມເມດຕານັ້ນ ເພື່ອເຈົ້າຈະໄດ້ຊີມຄວາມຫວານທີ່ບໍ່ສາມາດປຽບປານໄດ້. ສິ່ງນີ້ຈະບໍ່ພຽງແຕ່ສ້າງຄວາມຮັກສຳລັບເຮົາພາຍໃຈຕົວເຈົ້າ, ແຕ່ມັນຈະເຮັດໃຫ້ຄວາມຮັກຂອງເຈົ້າເລິກເຊິ່ງຂຶ້ນອີກດ້ວຍ.

ພາລະກິດຂອງເຮົາໄດ້ປະຕິບັດຕາມຂັ້ນຕອນ ແລະ ບໍ່ໄດ້ປະຕິບັດດ້ວຍຄວາມປະໝາດ ຫຼື ດ້ວຍຄວາມບໍ່ແຈ່ມແຈ້ງຢ່າງແນ່ນອນ. ເພື່ອທີ່ຈະຕິດຕາມເຮົາ, ພວກເຈົ້າຕ້ອງເຮັດສິ່ງນີ້ເຊັ່ນກັນ. ຈົ່ງເບິ່ງການປະພຶດຂອງເຮົາ ແລະ ຮຽນຮູ້ຈາກເຮົາ; ດ້ວຍວິທີນີ້, ຖ້າເຈົ້າຕິດຕາມບາດກ້າວຂອງເຮົາ ເຈົ້າກໍຈະຖືກນຳໄປສູ່ການປາກົດຂອງອານາຈັກ. ຈົ່ງຮ້ອງໂຮ່ເປັນສຽງດຽວກັນ! ບຸດຊາຍຂອງເຮົາເອີຍ! ພາລະກິດຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດໃນພວກເຈົ້າ, ໃນກຸ່ມຄົນນີ້. ພວກເຈົ້າບໍ່ຮູ້ສຶກໄດ້ຮັບພອນບໍ?

ມັນຍາກທີ່ຈະຢັ່ງເຖິງແທ້ໆ! ມື້ນີ້ ເຮົາໄດ້ນຳພວກເຈົ້າມາຢູ່ບ່ອນນີ້ເພື່ອພວກເຈົ້າຈະໄດ້ເຫັນພາລະກິດທີ່ອັດສະຈັນຂອງເຮົາ!

# ບົດທີ 39

ເປີດຕາຂອງເຈົ້າ ແລະ ເບິ່ງ ແລ້ວເຈົ້າຈະສາມາດເຫັນລິດອຳນາດທີ່ຍິ່ງໃຫຍ່ຂອງເຮົາຢູ່ທຸກຫົນທຸກແຫ່ງ! ເຈົ້າສາມາດໝັ້ນໃຈໄດ້ເລີຍວ່າເຮົາຢູ່ທຸກຫົນທຸກແຫ່ງ! ຈັກກະວານ ແລະ ທ້ອງຟ້າກຳລັງເຜີຍແຜ່ລິດອຳນາດທີ່ຍິ່ງໃຫຍ່ຂອງເຮົາ. ພຣະທຳທີ່ເຮົາໄດ້ກ່າວໄວ້ ກໍປະກົດເປັນຈິງໃນອາກາດທີ່ຮ້ອນຂຶ້ນ, ການປ່ຽນແປງຂອງສະພາບອາກາດ, ຄວາມຜິດປົກກະຕິຂອງຄົນ, ຄວາມບໍ່ເປັນລະບຽບໃນພຶນລະວັດທາງສັງຄົມ ແລະ ການຫຼອກລວງໃນຫົວໃຈຂອງຄົນ. ດວງຕາເວັນກາຍເປັນສີຂາວຫຼາຍຂຶ້ນ ແລະ ດວງເດືອນກາຍເປັນສີແດງຫຼາຍຂຶ້ນ; ທຸກຢ່າງຂາດຄວາມສົມດຸນ. ພວກເຈົ້າຍັງບໍ່ເຫັນສິ່ງເຫຼົ່ານີ້ບໍ?

ລິດອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າຖືກເປີດເຜີຍໃນເລື່ອງນີ້. ບໍ່ຕ້ອງສົງໄສເລີຍວ່າ ພຣະອົງເປັນພຣະເຈົ້າທີ່ແທ້ຈິງພຽງອົງດຽວ ຄື ອົງຊົງລິດທານຸພາບສູງສຸດ ທີ່ຜູ້ຄົນໄດ້ສະແຫວງຫາເປັນເວລາຫຼາຍປີ! ໃຜທີ່ສາມາດກ່າວອອກມາ ແລ້ວເຮັດໃຫ້ສິ່ງຕ່າງໆເກີດຂຶ້ນໄດ້? ມີແຕ່ພຣະເຈົ້າອົງຊົງລິດທານຸພາບສູງສຸດຂອງພວກເຮົາ. ຄວາມຈິງປະກົດຂຶ້ນທັນທີທີ່ພຣະອົງກ່າວອອກມາ. ເຈົ້າຈະບໍ່ເວົ້າວ່າ ພຣະອົງເປັນພຣະເຈົ້າທີ່ແທ້ຈິງ ໄດ້ແນວໃດ?

ເຮົາຮູ້ຢ່າງເລິກເຊິ່ງວ່າ ພວກເຈົ້າທຸກຄົນເຕັມໃຈທີ່ຈະຮ່ວມມືກັບເຮົາ ແລະ ເຮົາເຊື່ອວ່າ ຄົນທີ່ຖືກເລືອກຂອງເຮົາ, ອ້າຍເອື້ອຍນ້ອງອັນເປັນທີ່ຮັກຂອງເຮົາ ລ້ວນແລ້ວແຕ່ມີຄວາມປາຖະໜາແບບນີ້, ພຽງແຕ່ເຈົ້າບໍ່ສາມາດເຂົ້າສູ່ ຫຼື ປະຕິບັດຕົວຈິງ, ບໍ່ສາມາດໃຈເຢັນ ແລະ ສະຫງົບອາລົມ ເມື່ອເຈົ້າພົບກັບປະກົດການແຫ່ງຄວາມເປັນຈິງ. ເຈົ້າບໍ່ເຄີຍເອົາໃຈໃສ່ເຈດຕະນາຂອງພຣະເຈົ້າຈັກເທື່ອ ແລະ ເຈົ້າເອົາຜົນປະໂຫຍດສ່ວນຕົວຂອງເຈົ້າມາກ່ອນ ແລະ ລົງມືເຮັດໂດຍບໍ່ຕ້ອງຖ້າ. ເຮົາຢາກບອກພວກເຈົ້າວ່າ ຫົນທາງນີ້ຈະບໍ່ບັນລຸເຈດຕະນາຂອງເຮົາຈັກເທື່ອ! ເດັກນ້ອຍເອີຍ! ຈົ່ງມອບຫົວໃຈຂອງເຈົ້າທັງໝົດໃຫ້ກັບເຮົາ. ໃຫ້ຊຸດເຈນ! ເຮົາບໍ່ຕ້ອງການເງິນຂອງເຈົ້າ ຫຼື ສິ່ງຕ່າງໆຂອງເຈົ້າ ຫຼື ໃຫ້ເຈົ້າມາຢູ່ຕໍ່ໜ້າເຮົາເພື່ອຮັບໃຊ້ ຢ່າງກະຕືລືລົ້ນ, ຫຼອກລວງ ຫຼື ດ້ວຍຄວາມຄິດແຄບໆ. ຈົ່ງງຽບສະຫງົບ ແລະ ມີໃຈທີ່ບໍລິສຸດ, ລໍຖ້າ ແລະ ສະແຫວງຫາເມື່ອເກີດບັນຫາຂຶ້ນ ແລະ ເຮົາຈະມອບຄຳຕອບໃຫ້ກັບເຈົ້າ. ຢ່າສົງໄສ! ເປັນຫຍັງເຈົ້າຈຶ່ງບໍ່ເຊື່ອຈັກເທື່ອວ່າ ພຣະທຳຂອງເຮົາເປັນຈິງ? ເປັນຫຍັງເຈົ້າຈຶ່ງບໍ່ເຊື່ອໃນພຣະທຳຂອງເຮົາ? ເຈົ້າດື້ດຶງຈົນສຸດຂີດ ແລະ ກໍຍັງເປັນແບບນີ້ໃນເວລານີ້, ເຈົ້າໂງ່ຈ້າເກີນໄປ ແລະ ບໍ່ໄດ້ຮັບແສງສະຫວ່າງເລີຍ! ພວກເຈົ້າຈື່ຄວາມຈິງທີ່ສຳຄັນຫຼາຍສ່ຳໃດ? ເຈົ້າໄດ້ປະສົບກັບມັນແທ້ໆບໍ? ເຈົ້າເລີ່ມສັບສົນ ແລະ ປະພຶດຢ່າງເລີນເລີ້ ແລະ ຢ່າງຟ້າວຟັ່ງ ເວລາທີ່ພົບກັບບັນຫາ! ສິ່ງສຳຄັນໃນປັດຈຸບັນແມ່ນການທີ່ເຈົ້າເຂົ້າສູ່ວິນຍານ ແລະ ສື່ສານກັບເຮົາຫຼາຍຂຶ້ນ, ໃນທຳນອງດຽວກັນກັບທີ່ຫົວໃຈຂອງເຈົ້າມັກຄິດຕຶກຕ້ອງຄຳຖາມຕ່າງໆເຈົ້າເຂົ້າໃຈບໍ? ນີ້ແມ່ນກະແຈ! ການປະຕິບັດທີ່ລ້າຊ້າແມ່ນບັນຫາແທ້ໆ. ໄວແດ່, ຢ່າຊັກຊ້າເລີຍ! ຜູ້ຄົນທີ່ໄດ້ຍິນພຣະທຳຂອງເຮົາ ແລະ ບໍ່ຊັກຊ້າ ແຕ່ປະຕິບັດພຣະທຳເຫຼົ່ານັ້ນທັນທີ ຈະໄດ້ຮັບການອວຍພອນຢ່າງຫຼວງຫຼາຍ! ເຮົາຈະປະທານໃຫ້ກັບພວກເຈົ້າສອງເທົ່າ! ຢ່າກັງວົນເລີຍ! ເຮັດຄືກັບທີ່ເຮົາເວົ້າ ໂດຍບໍ່ຕ້ອງຊັກຊ້າແມ່ນແຕ່ວິນາທີດຽວ!

ແນວຄິດມະນຸດຂອງພວກເຈົ້າເປັນແບບນີ້ຢູ່ເລື້ອຍໆ ແລະ ເຈົ້າກໍມັກຜັດມື້ຜັດຍາມ, ມັກເລື່ອນສິ່ງທີ່ຄວນເຮັດໃຫ້ແລ້ວໃນມື້ນີ້ເປັນມື້ຕໍ່ໄປຢູ່ສະເໝີ. ຂີ້ຄ້ານ ແລະ ງຸ່ມງາມຫຼາຍ. ຄຳເວົ້າກໍບໍ່ສາມາດບັນລະຍາຍໄດ້! ມັນບໍ່ແມ່ນວ່າ ເຮົາເວົ້າເກີນຄວາມຈິງ ແຕ່ນັ້ນຄືຄວາມຈິງ. ຖ້າເຈົ້າບໍ່ເຊື່ອສິ່ງນີ້, ແລ້ວໃຫ້ກວດສອບຕົນເອງຢ່າງຮອບຄອບ ແລະ ກວດສະຖານະການຂອງເຈົ້າ ແລະ ເຈົ້າກໍຈະຄົ້ນພົບວ່າ ມັນເປັນແບບນີ້ແທ້ໆ!

# ບົດທີ 40

ເປັນຫຍັງເຈົ້າຈຶ່ງສະໝອງຊ້າຫຼາຍ? ເປັນຫຍັງເຈົ້າຈຶ່ງມຶນຫຼາຍ? ເຄື່ອງເຕືອນໃຈຫຼາຍຢ່າງກໍບໍ່ໄດ້ປຸກໃຫ້ພວກເຈົ້າຕື່ນເລີຍ; ສິ່ງນີ້ເປັນຕາເສົ້າໃຈສຳລັບເຮົາ. ເຮົາບໍ່ມີຫົວໃຈທີ່ຈະເຫັນລູກຊາຍຂອງເຮົາເປັນແບບນີ້ແທ້ໆ. ຫົວໃຈຂອງເຮົາຈະຮັບສິ່ງນີ້ໄດ້ແນວໃດ? ໂອ້ຍ! ເຮົາຕ້ອງສັ່ງສອນພວກເຈົ້າດ້ວຍມືຂອງເຮົາເອງ. ກ້າວຢ່າງຂອງເຮົາກໍສືບຕໍ່ໄວຂຶ້ນ. ລູກຊາຍຂອງເຮົາເອີຍ! ຈົ່ງລຸກຂຶ້ນໄວໆ ແລະ ຮ່ວມມືກັບເຮົາ. ແມ່ນໃຜທີ່ຈະເສຍສະຫຼະຕົນເອງເພື່ອເຮົາໃນຕອນນີ້? ແມ່ນໃຜທີ່ຈະສາມາດອຸທິດຕົນເອງແທ້ໆ ໂດຍປາສະຈາກຄຳຕໍ່ວ່າແມ່ນແຕ່ໜ້ອຍດຽວ? ພວກເຈົ້າມຶນຫຼາຍ ແລະ ປົກຢູ່ສະເໝີ! ມີຈັກຄົນທີ່ສາມາດຄິດຫາຄວາມຮູ້ສຶກຂອງເຮົາ ແລະ ແມ່ນໃຜທີ່ຈະສາມາດເຂົ້າໃຈພຣະວິນຍານແຫ່ງພຣະທຳຂອງເຮົາຢ່າງແທ້ຈິງ? ສິ່ງທີ່ເຮົາສາມາດເຮັດໄດ້ກໍຄືລໍຖ້າ ແລະ ຫວັງຢ່າງກັງວົນໃຈ; ເມື່ອເຫັນວ່າການເຄື່ອນໄຫວແຕ່ລະຢ່າງຂອງເຈົ້າບໍ່ສາມາດເປັນທີ່ພໍໃຈເຮົາໄດ້, ເຮົາຈະເວົ້າຫຍັງໄດ້ແດ່? ລູກຊາຍຂອງເຮົາເອີຍ! ທຸກສິ່ງທີ່ພຣະບິດາເຮັດໃນປັດຈຸບັນກໍແມ່ນເພື່ອລູກຊາຍຂອງເຮົາ. ເປັນຫຍັງລູກຊາຍຂອງເຮົາຈຶ່ງບໍ່ເຄີຍເຂົ້າໃຈຫົວໃຈຂອງເຮົາ ແລະ ເປັນຫຍັງລູກຊາຍຂອງເຮົາຈຶ່ງເຮັດໃຫ້ເຮົາ ຜູ້ເຊິ່ງເປັນພຣະບິດາຂອງເຈົ້າ ກັງວົນຢູ່ສະເໝີ? ເມື່ອໃດລູກຊາຍຂອງເຮົາຈຶ່ງຈະເຕີບໂຕເປັນຜູ້ໃຫຍ່ຂຶ້ນ, ບໍ່ເຮັດໃຫ້ເຮົາກັງວົນ ແລະ ຍອມໃຫ້ເຮົາໄວ້ໃຈໃນລູກຊາຍຂອງເຮົາ? ເມື່ອໃດລູກຊາຍຂອງເຮົາຈຶ່ງຈະສາມາດດຳລົງຊີວິດຢ່າງເປັນອິດສະຫຼະ, ລຸກຢືນຂຶ້ນ ແລະ ແບ່ງເບົາພາລະກິດທີ່ຢູ່ເທິງບ່າຂອງພຣະບິດາຂອງພວກເຂົາ? ເຮົາຫຼັ່ງນໍ້າຕາຢ່າງງຽບໆເພື່ອລູກຊາຍຂອງເຮົາ ແລະ ເຮົາທຸ່ມເທທຸກສິ່ງເພື່ອຄວາມສຳເລັດແຫ່ງແຜນການຄຸ້ມຄອງຂອງພຣະເຈົ້າ ແລະ ເພື່ອຊ່ວຍລູກຊາຍຂອງເຮົາ, ຄົນອັນເປັນທີ່ຮັກຂອງເຮົາ. ເຮົາບໍ່ມີທາງເລືອກອື່ນເລີຍ.

ຄຳສັນຍາຂອງເຮົາໄດ້ເກີດຂຶ້ນແລ້ວ ແລະ ຖືກສຳແດງອອກຕໍ່ຕາຂອງພວກເຈົ້າ. ເປັນຫຍັງເຈົ້າຈຶ່ງບໍ່ຄິດຫາຫົວໃຈຂອງເຮົາ? ເປັນຫຍັງ? ເປັນຫຍັງ? ຈົນຮອດຕອນນີ້, ເຈົ້າໄດ້ນັບແລ້ວບໍວ່າ ມີຈັກສິ່ງທີ່ເຈົ້າເຮັດ ແລ້ວເປັນທີ່ພໍໃຈຂອງເຮົາ ຫຼື ສິ່ງທີ່ບຳລຸງ ແລະ ລໍ່ລ້ຽງຄຣິສຕະຈັກ? ໃຫ້ໄຕ່ຕອງສິ່ງນີ້ຢ່າງຮອບຄອບ ແລະ ຢ່າປະໝາດ. ຢ່າປະຖິ້ມສະຖານະການທີ່ເປັນຄວາມຈິງແມ່ນແຕ່ຢ່າງດຽວ. ເຈົ້າຕ້ອງບໍ່ໃສ່ໃຈກັບລັກສະນະພາຍນອກເທົ່ານັ້ນ ແລະ ເບິ່ງຂ້າມໃຈຄວາມສຳຄັນ. ໃນທຸກເວລາ, ເຈົ້າຕ້ອງກວດສອບວ່າ ຄຳເວົ້າ ແລະ ການກະທຳແຕ່ລະຢ່າງຂອງເຈົ້າ ແລະ ການເຄື່ອນໄຫວທຸກຢ່າງຂອງເຈົ້າໄດ້ຜ່ານການພິພາກສາຕໍ່ໜ້າທີ່ນັ່ງຂອງພຣະຄຣິດ ຫຼື ບໍ່ ແລະ ເຈົ້າໄດ້ປ່ຽນແປງເປັນລັກສະນະຂອງບຸກຄົນໃໝ່ ຫຼື ບໍ່ ເຊິ່ງບໍ່ແມ່ນການລອກແບບ, ແຕ່ກົງກັນຂ້າມ ເປັນການສຳແດງຊີວິດທີ່ອອກມາຈາກສ່ວນເລິກຢູ່ພາຍໃນ. ຢ່າຊັກຊ້າກັບຊີວິດຂອງເຈົ້າເພື່ອຫຼີກຫຼ່ຽງການໄດ້ຮັບຄວາມສູນເສຍ. ໃຫ້ເລັ່ງ ແລະ ແກ້ໄຂສະຖານະການນີ້, ເປັນທີ່ພໍໃຈຂອງເຮົາ ແລະ ຈື່ຫຼັກການປະພຶດໄວ້: ເຮັດສິ່ງຕ່າງໆດ້ວຍຄວາມຊອບທຳ ແລະ ຄວາມຊື່ສັດ ແລະ ເປັນທີ່ພໍໃຈຂອງເຮົາ. ຢ່າເລີນເລີ້. ເຈົ້າຈື່ສິ່ງນີ້ໄດ້ບໍ?

# ບົດທີ 41

ຈົ່ງຢ່າມີຄວາມສິງໄສຫຼາຍ ກ່ຽວກັບບັນຫາຕ່າງໆທີ່ເກີດຂຶ້ນໃນຄຣິສຕະຈັກ. ໃນເວລາທີ່ຄຣິສຕະຈັກຖືກສ້າງຂຶ້ນ ມັນກໍເປັນໄປບໍ່ໄດ້ທີ່ຈະຫຼີກເວັ້ນຂໍ້ຜິດພາດ ແຕ່ບໍ່ຕ້ອງຕົກໃຈເມື່ອເຈົ້າພະເຊີນກັບບັນຫາ; ຈົ່ງໃຈເຢັນ ແລະ ບໍ່ສະດຸ້ງສະເທືອນ. ເຮົາບໍ່ໄດ້ບອກພວກເຈົ້າແບບນັ້ນບໍ? ຈົ່ງມາຢູ່ຕໍ່ໜ້າເຮົາ ແລະ ອະທິຖານເຖິງເຮົາເລື້ອຍໆ ແລະ ເຮົາຈະສະແດງເຈດຕະນາຂອງເຮົາໃຫ້ເຈົ້າເຫັນຢ່າງຊັດເຈນ. ຄຣິສຕະຈັກແມ່ນຫົວໃຈຂອງເຮົາ ແລະ ມັນແມ່ນເປົ້າໝາຍສູງສຸດຂອງເຮົາ ແລ້ວເຮົາຈະບໍ່ຮັກຄຣິສຕະຈັກໄດ້ແນວໃດ? ຈົ່ງຢ່າຢ້ານກົວ ເມື່ອສິ່ງແບບນີ້ເກີດຂຶ້ນໃນຄຣິສຕະຈັກ ພວກມັນເກີດຂຶ້ນຈາກການອະນຸຍາດຂອງເຮົາ. ຈົ່ງຢືນຂຶ້ນ ແລະ ເວົ້າຕາງໜ້າໃຫ້ແກ່ເຮົາ. ຈົ່ງມີຄວາມເຊື່ອວ່າທຸກສິ່ງ ແລະ ທຸກເລື່ອງແມ່ນໄດ້ຮັບອະນຸຍາດຈາກບັນລັງຂອງເຮົາ ແລະ ທຸກຢ່າງແມ່ນມີເຈດຕະນາຂອງເຮົາຢູ່ພາຍໃນພວກມັນ. ຖ້າເຈົ້າສືບຕໍ່ສົນທະນາແບບດົ້ດ້ານ ມັນກໍຈະມີບັນຫາ ແລ້ວເຈົ້າບໍ່ໄດ້ຄິດເຖິງຜົນທີ່ຈະຕາມມາບໍ? ນີ້ແມ່ນສິ່ງທີ່ຊາຕານຈະນຳໃຊ້ເປັນຜົນປະໂຫຍດ. ຈົ່ງມາຢູ່ຕໍ່ໜ້າເຮົາເປັນປະຈຳ. ເຮົາຈະເວົ້າແບບທຳມະດາ: ຖ້າເຈົ້າຈະເຮັດບາງສິ່ງໂດຍບໍ່ໄດ້ມາຢູ່ຕໍ່ໜ້າເຮົາ ແລ້ວຢ່າຄິດວ່າ ເຈົ້າຈະສາມາດເຮັດມັນສຳເລັດ. ມັນແມ່ນພວກເຈົ້າທີ່ໄດ້ບັງຄັບໃຫ້ເຮົາມາຢູ່ຈຸດນີ້.

ຈົ່ງຢ່າທໍ້ແທ້, ຢ່າອ່ອນແອ ແລະ ເຮົາຈະເປີດເຜີຍສິ່ງຕ່າງໆໃຫ້ກັບເຈົ້າ. ເສັ້ນທາງໄປສູ່ອານາຈັກແມ່ນບໍ່ລຽບງ່າຍ ແລະ ບໍ່ມີສິ່ງໃດທີ່ຈະງ່າຍປານນັ້ນ! ເຈົ້າຕ້ອງການໃຫ້ພອນມາຫາເຈົ້າແບບງ່າຍໆແມ່ນບໍ? ໃນປັດຈຸບັນ ທຸກຄົນຈະພະເຊີນກັບການທົດສອບທີ່ຂົມຂື່ນ, ປາສະຈາກການທົດສອບດັ່ງກ່າວ ຫົວໃຈຂອງພວກເຈົ້າທີ່ມີຄວາມຮັກຕໍ່ເຮົາກໍຈະບໍ່ເຂັ້ມແຂງ ແລະ ເຈົ້າຈະບໍ່ມີຄວາມຮັກທີ່ແທ້ຈິງຕໍ່ເຮົາ. ເຖິງແມ່ນການທົດສອບເຫຼົ່ານີ້ຈະເປັນພຽງເຫດການເລັກນ້ອຍ ແຕ່ທຸກຄົນກໍຕ້ອງໄດ້ຜ່ານພວກມັນ ພຽງແຕ່ວ່າ ຄວາມຍາກຂອງການທົດສອບຂອງແຕ່ລະຄົນຈະແຕກຕ່າງກັນ. ການທົດລອງແມ່ນພອນຈາກເຮົາ ແລ້ວມີຈັກຄົນທີ່ມາຄຸເຂົ່າຢູ່ຕໍ່ໜ້າເຮົາເພື່ອຂໍພອນຈາກເຮົາ? ເດັກໂງ່ເອີຍ! ເຈົ້າຄິດສະເໝີວ່າ ພຣະທຳອັນປະເສີດພຽງບາງຂໍ້ກໍຖືວ່າ ເປັນພອນຂອງເຮົາ ແຕ່ບໍ່ຮັບຮູ້ວ່າ ຄວາມຂົມຂື່ນກໍແມ່ນໜຶ່ງໃນບັນດາພອນຂອງເຮົາເຊັ່ນກັນ. ຜູ້ທີ່ແບ່ງປັນຄວາມຂົມຂື່ນຂອງເຮົາຈະແບ່ງປັນຄວາມຫວານຊື່ນຂອງເຮົາຢ່າງແນ່ນອນ. ນັ້ນແມ່ນສັນຍາຂອງເຮົາ ແລະ ພອນຂອງເຮົາທີ່ມີໃຫ້ພວກເຈົ້າ. ຈົ່ງຢ່າລັງເລທີ່ຈະກິນ, ດື່ມ ແລະ ມີຄວາມສຸກກັບພຣະທຳຂອງເຮົາ. ເມື່ອຄວາມມືດຜ່ານໄປ ກໍຈະມີແສງສະຫວ່າງຂຶ້ນມາແທນ. ມັນແມ່ນຄວາມມືດກ່ອນຮຸ່ງເຊົ້າ; ຫຼັງຈາກເວລານີ້ ມັນກໍຈະແຈ້ງຂຶ້ນເທື່ອລະໜ້ອຍ ແລະ ຫຼັງຈາກນັ້ນ ຕາເວັນກໍຈະຂຶ້ນ. ຈົ່ງຢ່າມີຄວາມຢ້ານກົວ ຫຼື ຂາດຄວາມກ້າ. ມື້ນີ້ເຮົາສະໜັບສະໜູນບຸດຂອງເຮົາ ແລະ ໃຊ້ພະລັງຂອງເຮົາເພື່ອພວກເຂົາ.

ເມື່ອເວົ້າເຖິງວຽກງານຂອງຄຣິສຕະຈັກ ກໍຈົ່ງຢ່າໜີຄວາມຮັບຜິດຊອບຂອງເຈົ້າ. ຖ້າເຈົ້ານຳເອົາບັນຫາມາຢູ່ຕໍ່ໜ້າເຮົາຢ່າງເອົາໃຈໃສ່ ເຈົ້າກໍຈະພົບເຫັນຫົນທາງ. ເມື່ອບັນຫາເລັກນ້ອຍແບບນີ້ເກີດຂຶ້ນເຈົ້າຢ້ານກົວ, ຕົກໃຈ ແລະ ບໍ່ຮູ້ຈັກເຮັດຫຍັງເລີຍແມ່ນບໍ່? ເຮົາໄດ້ເວົ້າຫຼາຍເທື່ອວ່າ "ຈົ່ງເຂົ້າມາໃກ້ໆ

ເຮົາເປັນປະຈຳ!" ພວກເຈົ້າໄດ້ປະຕິບັດສິ່ງຕ່າງໆ ທີ່ເຮົາໄດ້ຮຽກຮ້ອງໃຫ້ພວກເຈົ້າເຮັດຢ່າງເອົາໃຈໃສ່ຢູ່ບໍ? ພວກເຈົ້າໄດ້ພິຈາລະນາພຣະທຳຂອງເຮົາຈັກເທື່ອ? ຖ້າພວກເຈົ້າບໍ່ໄດ້ພິຈາລະນາ, ແລ້ວພວກເຈົ້າກໍບໍ່ມີຄວາມເຂົ້າໃຈຢ່າງຊັດເຈນ. ນີ້ບໍ່ແມ່ນສິ່ງທີ່ພວກເຈົ້າເຮັດຂຶ້ນເອງບໍ? ເຈົ້າກ່າວໂທດຜູ້ອື່ນ ແຕ່ເປັນຫຍັງເຈົ້າບໍ່ຮູ້ສຶກກຽດຊັງຕົວເອງເລີຍ? ເຈົ້າເຮັດໃຫ້ສິ່ງຕ່າງໆຫຍຸ້ງຍາກ ແລະ ຫຼັງຈາກນັ້ນ ເຈົ້າກໍບໍ່ເອົາໃຈໃສ່ ແລະ ເຮັດພໍເປັນພິທີ; ເຈົ້າຕ້ອງໃສ່ໃຈກັບພຣະທຳຂອງເຮົາ.

ຜູ້ທີ່ເຊື່ອຟັງ ແລະ ອ່ອນນ້ອມຈະໄດ້ຮັບພອນທີ່ຍິ່ງໃຫຍ່. ໃນຄຣິສຕະຈັກ ຈົ່ງຢືນເປັນພະຍານໃຫ້ເຮົາຢ່າງໝັ້ນຄົງ ແລະ ຈົ່ງຢືນຢັນດ້ວຍຄວາມຈິງ; ຖືກກໍຄືຖືກ ແລະ ຜິດກໍຄືຜິດ. ຈົ່ງຢ່າສັບສົນວ່າດຳແມ່ນຂາວ. ເຈົ້າຈະຕ້ອງຕໍ່ສູ້ກັບຊາຕານ ແລະ ຕ້ອງທຳລາຍມັນ ເພື່ອບໍ່ໃຫ້ມັນລຸກຂຶ້ນມາໄດ້ອີກຕໍ່ໄປ. ເຈົ້າຕ້ອງເສຍສະຫຼະທຸກສິ່ງເພື່ອປົກປ້ອງການເປັນພະຍານໃຫ້ແກ່ເຮົາ. ສິ່ງນີ້ຈະເປັນເປົ້າໝາຍຂອງການກະທຳຂອງເຈົ້າ ແລະ ຈົ່ງຢ່າລືມສິ່ງນີ້. ແຕ່ໃນຕອນນີ້ ເຈົ້າຍັງຂາດຄວາມເຊື່ອ ແລະ ຄວາມສາມາດໃນການແຍກແຍະສິ່ງຕ່າງໆ ແລະ ເຈົ້າບໍ່ສາມາດເຂົ້າໃຈພຣະທຳ ແລະ ເຈດຕະນາຂອງເຮົາຕະຫຼອດເວລາ. ແນວໃດກໍຕາມ, ຈົ່ງຢ່າຮ້ອນໃຈ; ທຸກສິ່ງທຸກຢ່າງແມ່ນດຳເນີນຕາມບາດກ້າວຂອງເຮົາ ແລະ ຄວາມຮ້ອນໃຈພຽງແຕ່ຈະເຮັດໃຫ້ເກີດມີບັນຫາເທົ່ານັ້ນ. ໃຊ້ເວລາຢູ່ຕໍ່ໜ້າເຮົາໃຫ້ຫຼາຍຂຶ້ນ ແລະ ຢ່າໄປສົນໃຈກັບອາຫານ ແລະ ເຄື່ອງນຸ່ງຫົ່ມ ເຊິ່ງເປັນສິ່ງສຳລັບຮ່າງກາຍພາຍນອກ. ຈົ່ງສະແຫວງຫາເຈດຕະນາຂອງເຮົາເປັນປະຈຳ ແລະ ເຮົາຈະສະແດງໃຫ້ເຈົ້າເຫັນຢ່າງຊັດເຈນວ່າ ສິ່ງເຫຼົ່ານັ້ນແມ່ນຫຍັງ. ເຈົ້າຈະຄ່ອຍໆພົບເຫັນເຈດຕະນາຂອງເຮົາໃນທຸກສິ່ງທຸກຢ່າງ ເພື່ອວ່າ ເຮົາຈະມີຫົນທາງເຂົ້າເຖິງທຸກຄົນໂດຍປາສະຈາກອຸປະສັກໃດໆ. ສິ່ງນີ້ຈະເຮັດໃຫ້ຫົວໃຈຂອງເຮົາມີຄວາມເພິ່ງພໍໃຈ ແລະ ພວກເຈົ້າຈະໄດ້ຮັບພອນຈາກເຮົາຕະຫຼອດໄປເປັນນິດນິລັນ!

# ບົດທີ 42

ການກະທຳຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດນັ້ນຍິ່ງໃຫຍ່ແທ້! ຊ່າງໜ້າອັດສະຈັນແທ້! ຊ່າງໜ້າມະຫັດສະຈັນແທ້! ມີສຽງແກດັງເຈັດເທື່ອ, ມີສຽງຟ້າຮ້ອງດັງເຈັດຄັ້ງ ແລະ ມີການເທອອກຈາກຖ້ວຍເຈັດໃບ. ສິ່ງເຫຼົ່ານີ້ຈະຖືກສະແດງໃຫ້ເຫັນຢ່າງເປີດເຜີຍທັນທີ ແລະ ຈະບໍ່ມີຂໍ້ສົງໄສໃດໆ. ຄວາມຮັກຂອງພຣະເຈົ້າແມ່ນມາເຖິງພວກເຮົາທຸກມື້. ມີແຕ່ພຣະເຈົ້າອົງຊົງລິດທານຸພາບສູງສຸດເທົ່ານັ້ນທີ່ສາມາດຊ່ວຍພວກເຮົາໄດ້; ບໍ່ວ່າພວກເຮົາຈະພົບກັບຄວາມໂຊກຮ້າຍ ຫຼື ໄດ້ຮັບພອນ ແມ່ນລ້ວນແລ້ວແຕ່ເປັນຍ້ອນພຣະອົງ ແລະ ພວກເຮົາທີ່ເປັນມະນຸດບໍ່ມີທາງທີ່ຈະຕັດສິນໃຈໃນເລື່ອງດັ່ງກ່າວນີ້ໄດ້. ຜູ້ທີ່ອຸທິດຕົນຕໍ່ພຣະເຈົ້າຢ່າງໝົດໃຈຈະໄດ້ຮັບພອນທີ່ຍິ່ງໃຫຍ່ຢ່າງແນ່ນອນ ໃນຂະນະທີ່ຜູ້ທີ່ຕ້ອງການຮັກສາຊີວິດຂອງຕົນຈະທົນທຸກຕໍ່ຄວາມສູນເສຍອັນຍິ່ງໃຫຍ່ຂອງຊີວິດພວກເຂົາ; ທຸກສິ່ງ ແລະ ທຸກບັນຫາແມ່ນຢູ່ໃນມືຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດ. ຈົ່ງຢ່າຢຸດບາດກ້າວຂອງເຈົ້າອີກຕໍ່ໄປ. ການປ່ຽນແປງທີ່ໃຫຍ່ຫຼວງຈະມາຈາກສະຫວັນ ແລະ ແຜ່ນດິນໂລກ; ມະນຸດບໍ່ມີທາງລີ້ ແລະ ຈະມີແຕ່ສຽງຮ້ອງໄຫ້ຢ່າງຂົມຂື່ນເທົ່ານັ້ນ ໂດຍບໍ່ມີທາງເລືອກອື່ນ. ຈົ່ງປະຕິບັດຕາມພາລະກິດທີ່ພຣະວິນຍານບໍລິສຸດກຳລັງປະຕິບັດຢູ່ໃນປັດຈຸບັນນີ້. ເຈົ້າຄວນມີຄວາມຊັດເຈນພາຍໃນຕົວເຈົ້າກ່ຽວກັບບາດກ້າວທີ່ເຮັດໃຫ້ພາລະກິດຂອງພຣະອົງມີຄວາມຄືບໜ້າ ໂດຍບໍ່ຈຳເປັນຕ້ອງໃຫ້ຜູ້ອື່ນມາກ່າວເຕືອນອີກ. ຕອນນີ້ຈົ່ງມາຢູ່ຕໍ່ໜ້າພຣະເຈົ້າອົງຊົງລິດທານຸພາບສູງສຸດໃຫ້ເປັນປະຈຳ ແລະ ຂໍທຸກສິ່ງທຸກຢ່າງຈາກພຣະອົງ. ພຣະອົງຈະສ່ອງສະຫວ່າງເຈົ້າຢູ່ພາຍໃນຢ່າງແນ່ນອນ ແລະ ໃນເວລາທີ່ສຳຄັນພຣະອົງກໍຈະປົກປ້ອງເຈົ້າ. ຈົ່ງຢ່າມີຄວາມຢ້ານກົວ! ພຣະອົງໄດ້ຄອບຄອງການດຳລົງຢູ່ທັງໝົດຂອງເຈົ້າແລ້ວ ແລະ ດ້ວຍການປົກປ້ອງຂອງພຣະອົງ ແລະ ການເບິ່ງແຍງຂອງພຣະອົງ ແລ້ວຍັງມີຫຍັງອີກທີ່ເຈົ້າຈະຕ້ອງຢ້ານກົວ? ໃນປັດຈຸບັນ ຜົນສຳເລັດຂອງຄວາມປະສົງຂອງພຣະເຈົ້າແມ່ນໃກ້ຈະມາເຖິງ ແລະ ຜູ້ໃດທີ່ມີຄວາມຢ້ານກົວຈະສູນເສຍທັງຍືນ. ສິ່ງທີ່ເຮົາກຳລັງບອກພວກເຈົ້າແມ່ນຄວາມຈິງ. ຈົ່ງມືນຕາທາງຈິດວິນຍານຂອງເຈົ້າ ແລະ ສະຫວັນກໍຈະປ່ຽນແປງທັນທີ. ມີຫຍັງທີ່ເຈົ້າຕ້ອງຢ້ານ? ສະຫວັນ ແລະ ແຜ່ນດິນໂລກຈະຖືກທຳລາຍທັນທີຈາກການເຄື່ອນຍ້າຍມືຂອງພຣະອົງແບບເບົາໆ. ຄວາມກັງວົນຂອງມະນຸດແມ່ນມີປະໂຫຍດຫຍັງ? ທຸກສິ່ງທຸກຢ່າງບໍ່ໄດ້ຢູ່ໃນມືຂອງພຣະເຈົ້າບໍ? ຖ້າພຣະອົງເວົ້າວ່າ ສະຫວັນ ແລະ ແຜ່ນດິນໂລກຕ້ອງປ່ຽນແປງ ພວກມັນກໍຈະປ່ຽນແປງ. ຖ້າພຣະອົງເວົ້າວ່າ ພວກເຮົາຕ້ອງຖືກເຮັດໃຫ້ສົມບູນ ພວກເຮົາກໍຈະຖືກເຮັດໃຫ້ສົມບູນ. ບໍ່ມີຄວາມຈຳເປັນທີ່ມະນຸດຕ້ອງກັງວົນ, ພວກເຂົາຕ້ອງກ້າວໄປຂ້າງໜ້າຢ່າງໃຈເຢັນ. ຢ່າງໃດກໍຕາມ, ພວກເຈົ້າຄວນເອົາໃຈໃສ່ ແລະ ມີຄວາມຕື່ນຕົວໃຫ້ຫຼາຍ. ສະຫວັນອາດປ່ຽນແປງທັນທີ! ເຖິງຢ່າງໃດກໍ່ຕາມ, ຕາຂອງຄົນປ່າອາດຖືກເປີດໃຫ້ກວ້າງໄດ້ ແຕ່ກໍຍັງບໍ່ສາມາດເບິ່ງສິ່ງໃດໄດ້. ຈົ່ງຟ້າວມີຄວາມຕື່ນຕົວ ເພາະຄວາມປະສົງຂອງພຣະເຈົ້າແມ່ນຖືກເຮັດໃຫ້ສຳເລັດແລ້ວ, ໂຄງການຂອງພຣະອົງແມ່ນສຳເລັດແລ້ວ, ແຜນການຂອງພຣະອົງແມ່ນປະສົບຜົນສຳເລັດແລ້ວ ແລະ ບຸດຊາຍຂອງພຣະອົງໄດ້ມາຮອດບັນລັງຂອງພຣະອົງ

ແລ້ວ. ພວກເຂົາ ພ້ອມດ້ວຍພຣະເຈົ້າອົງຊົງລິດທານຸພາບສູງສຸດຈະພິພາກສາບັນດາປະເທດຊາດທັງໝົດ ແລະ ປະຊາຊົນທຸກຄົນ. ຜູ້ທີ່ໄດ້ຂົ່ມເຫັງຄຣິສຕະຈັກ ແລະ ເຮັດໃຫ້ບຸດຊາຍຂອງພຣະເຈົ້າໄດ້ຮັບການບາດເຈັບຢ່າງໂຫດຮ້າຍຈະຖືກລົງໂທດຢ່າງໜັກໜ່ວງຢ່າງແນ່ນອນ! ສ່ວນຜູ້ທີ່ມອບຕົວເອງໃຫ້ແກ່ພຣະເຈົ້າຢ່າງຈິງໃຈ ແລະ ສະໜັບສະໜູນທຸກສິ່ງ, ພຣະເຈົ້າກໍຈະຮັກພວກເຂົາຕະຫຼອດການຢ່າງແນ່ນອນໂດຍບໍ່ມີວັນປ່ຽນແປງ!

# ບົດທີ 43

ເຮົາບໍ່ໄດ້ເຕືອນພວກເຈົ້າເທື່ອບໍ? ຈົ່ງຢ່າວິຕົກກັງວົນເລີຍ; ພວກເຈົ້າບໍ່ຟັງເຮົາເລີຍ, ພວກເຈົ້າຈັ່ງແມ່ນຄົນທີ່ບໍ່ມີຄວາມຄິດ! ພວກເຈົ້າຈະສາມາດເຂົ້າໃຈຫົວໃຈຂອງເຮົາໄດ້ຕອນໃດ? ທຸກມື້ແມ່ນມີແສງສະຫວ່າງໃໝ່, ທຸກມື້ແມ່ນມີແສງໃໝ່. ພວກເຈົ້າໄດ້ຄວ້າມັນມາເພື່ອຕົວເອງຈັກຄັ້ງແລ້ວ? ເຮົາບໍ່ໄດ້ບອກພວກເຈົ້າດ້ວຍຕົວເອງບໍ? ພວກເຈົ້າຍັງບໍ່ດີ້ນຮົນຄືກັນກັບແມງໄມ້ທີ່ເຄື່ອນໄຫວເມື່ອຖືກແຍ່ເທົ່ານັ້ນ ແຕ່ພວກເຈົ້າບໍ່ສາມາດເປັນເຈົ້າການໃນການຮ່ວມມືກັບເຮົາ ແລະ ເພື່ອສະແດງຄວາມເຫັນໃຈຕໍ່ພາລະຂອງເຮົາ. ເຮົາຢາກເຫັນຮອຍຍິ້ມທີ່ມີຊີວິດຊີວາ ແລະ ໜ້າຮັກຂອງພວກເຈົ້າ, ຢາກເຫັນກິລິຍາທີ່ຫ້າວຫັນ ແລະ ມີຊີວິດຊີວາຂອງບຸດຊາຍຂອງເຮົາ ແຕ່ເຮົາບໍ່ສາມາດເຮັດໄດ້. ກົງກັນຂ້າມ, ພວກເຈົ້າມີສະໝອງທີ່ອ່ອນແອ, ເປັນບ້າ ແລະ ໂງ່ຈ້າ. ພວກເຈົ້າຄວນເປັນເຈົ້າການໃນການສະແຫວງຫາ. ຈົ່ງສະແຫວງຫາດ້ວຍຄວາມກ້າຫານ! ພຽງແຕ່ເປີດໃຈຂອງເຈົ້າ ແລະ ໃຫ້ເຮົາອາໄສຢູ່ພາຍໃນເຈົ້າ. ຈົ່ງລະວັງ ແລະ ຈົ່ງເຝົ້າເບິ່ງດ້ວຍຄວາມລະມັດລະວັງ! ບາງຄົນໃນຄຣິສຕະຈັກແມ່ນຄົນຫຼອກລວງ ແລະເຈົ້າຄວນເໜັ້ນໜັກໃສ່ພຣະທຳເຫຼົ່ານີ້ສະເໝີ ເພາະຢ້ານວ່າ ຊີວິດຂອງເຈົ້າຈະຖືກກະທົບ ຫຼື ທົນທຸກກັບການສູນເສຍບາງຢ່າງ. ຈົ່ງໝັ້ນໃຈວ່າ ຕາບໃດທີ່ເຈົ້າມີຄວາມກ້າຫານທີ່ຈະຢືນຂຶ້ນ ແລະ ເວົ້າເພື່ອເຮົາ, ເຮົາກໍຈະແບກຮັບພາລະທັງໝົດ ແລະ ສ້າງຄວາມເຂັ້ມແຂງໃຫ້ເຈົ້າ! ຕາບໃດທີ່ເຈົ້າເຮັດໃຫ້ໃຈຂອງເຮົາພໍໃຈ, ເຮົາກໍຈະສະແດງຮອຍຍິ້ມ ແລະ ຄວາມປະສົງຂອງເຮົາໃຫ້ເຈົ້າເຫັນສະເໝີ. ຕາບໃດທີ່ເຈົ້າມີຄວາມຕັ້ງໃຈທີ່ເຂັ້ມແຂງ ແລະ ສະແດງອອກເຖິງອຸປະນິໄສຂອງບຸດຊາຍ, ເຮົາກໍຈະສະໜັບສະໜູນເຈົ້າ ແລະ ຈັດໃຫ້ເຈົ້າຢູ່ໃນຕຳແໜ່ງທີ່ສຳຄັນ. ເມື່ອເຈົ້າມາຢູ່ຕໍ່ໜ້າເຮົາ ກໍໃຫ້ເຂົ້າມາໃກ້ໆເຮົາ. ຈົ່ງຢ່າຢ້ານຖ້າເຈົ້າບໍ່ສາມາດເວົ້າໄດ້. ຕາບໃດທີ່ເຈົ້າມີໃຈສະແຫວງຫາ ເຮົາກໍຈະມອບພຣະທຳໃຫ້ເຈົ້າ. ເຮົາບໍ່ຕ້ອງການຄຳເວົ້າທີ່ຟັງມ່ວນ ແລະ ເຮົາບໍ່ຕ້ອງການການປະຈົບປະແຈງຂອງເຈົ້າ; ເຮົາຊັງສິ່ງປະເພດນີ້ທີ່ສຸດ. ເຮົາບໍ່ພໍໃຈກັບຄົນປະເພດນີ້ທີ່ສຸດ. ພວກເຂົາແມ່ນສ້ຽນໄມ້ທີ່ຢູ່ໃນຕາຂອງເຮົາ ຫຼື ເປັນໜາມໃນເນື້ອໜັງຂອງເຮົາ ທີ່ຈະຕ້ອງຖືກເອົາອອກ. ບໍ່ດັ່ງນັ້ນ ບຸດຊາຍຂອງເຮົາຈະບໍ່ສາມາດໃຊ້ອຳນາດເພື່ອເຮົາ ແລະ ຈະຢູ່ພາຍໃຕ້ການຄວບຄຸມທີ່ອຶດອັດ. ເປັນຫຍັງເຮົາຈຶ່ງສະເດັດມາ? ເຮົາໄດ້ມາເພື່ອສະໜັບສະໜູນ ແລະ ເພື່ອຊຸກຍູ້ບຸດຊາຍຂອງເຮົາ ເພື່ອວ່າມື້ທີ່ພວກເຂົາຕ້ອງທົນຕໍ່ການກົດຂີ່, ການຂົ່ມເຫັງ, ຄວາມບໍ່ເຫັນອົກເຫັນໃຈ ແລະ ການທາລຸນຈະຫາຍໄປຢ່າງຕະຫຼອດການ!

ຈົ່ງມີຄວາມກ້າຫານ. ເຮົາຈະຍ່າງກັບເຈົ້າ, ອາໄສຢູ່ກັບເຈົ້າ, ເວົ້າກັບເຈົ້າ ແລະ ກະທຳກັບເຈົ້າຕະຫຼອດເວລາ. ຈົ່ງຢ່າຢ້ານ. ຈົ່ງຢ່າລັງເລທີ່ຈະເວົ້າ. ພວກເຈົ້າຖືເອົາອາລົມເປັນໃຫຍ່, ບໍ່ກ້າ ແລະຢ້ານຕະຫຼອດ. ຜູ້ທີ່ບໍ່ມີປະໂຫຍດຕໍ່ການສ້າງຄຣິສຕະຈັກຈະຕ້ອງຖືກກຳຈັດ. ນີ້ລວມເຖິງຜູ້ທີ່ຢູ່ໃນຄຣິສຕະຈັກ ທີ່ມີສະພາບການທີ່ບໍ່ດີ ແລະ ຜູ້ທີ່ບໍ່ສາມາດກະທຳຕາມພຣະທຳຂອງເຮົາ ເຊິ່ງຍິ່ງກວ່ານັ້ນແມ່ນແມ່ ແລະ ພໍ່ທີ່ບໍ່ມີຄວາມເຊື່ອຂອງພວກເຈົ້າ. ເຮົາບໍ່ຕ້ອງການສິ່ງເຫຼົ່ານັ້ນ. ພວກເຂົາຕ້ອງຖືກກຳຈັດ ແລະ ບໍ່ມີໃຜຄວນຢູ່ຕໍ່. ຈົ່ງປ່ອຍຄວາມສຳພັນທີ່ຢູ່ຕິດມື ແລະ ຕີນຂອງເຈົ້າ. ຕາບໃດທີ່ເຈົ້າ

ກວດສອບເຈດຕະນາຕ່າງໆຂອງຕົນເອງ ແລະ ພວກມັນບໍ່ກ່ຽວກັບການໄດ້ ແລະ ການເສຍ ຫຼື ຊື່ສຽງ ແລະ ຄວາມຮັ່ງມີ ຫຼື ເພື່ອສາຍສຳພັນສ່ວນຕົວ ເຮົາກໍຈະຕິດຕາມເຈົ້າ, ຊີ້ນຳເຈົ້າ ແລະ ມອບການນຳທາງທີ່ຊັດເຈນໃຫ້ເຈົ້າຕະຫຼອດເວລາ.

ບຸດຊາຍຂອງເຮົາເອີຍ! ເຮົາຄວນເວົ້າຫຍັງ? ເຖິງວ່າເຮົາຈະເວົ້າສິ່ງເຫຼົ່ານີ້ ພວກເຈົ້າແມ່ນຍັງບໍ່ຄິດເຖິງໃຈຂອງເຮົາຢູ່ດີ ແລະ ກໍຍັງບໍ່ມີຄວາມກ້າຫານ. ພວກເຈົ້າຢ້ານຫຍັງ? ເປັນຫຍັງພວກເຈົ້າຍັງຍຶດຕິດຢູ່ກັບກົດເກນ ແລະ ກົດລະບຽບ? ເຮົາໄດ້ປ່ອຍພວກເຈົ້າແລ້ວ ແຕ່ພວກເຈົ້າຍັງບໍ່ເປັນອິດສະຫຼະ. ເປັນຫຍັງຄືເປັນແນວນີ້? ສື່ສານກັບເຮົາໃຫ້ຫຼາຍຂຶ້ນ ແລະ ເຮົາຈະບອກເຈົ້າ. ຢ່າມາທົດສອບເຮົາ. ເຮົາຄືຂອງແທ້. ເຮົາບໍ່ມີມານຍາ; ທຸກຢ່າງແມ່ນຂອງແທ້! ສິ່ງທີ່ເຮົາເວົ້າແມ່ນຄວາມຈິງ. ເຮົາບໍ່ເຄີຍຄືນຄຳເວົ້າຂອງເຮົາ.

# ບົດທີ 44

ເຮົາຊອບທຳ, ເຮົາໜ້າເຊື່ອຖື ແລະ ເຮົາເປັນພຣະເຈົ້າທີ່ກວດສອບສ່ວນເລິກທີ່ສຸດໃນຫົວໃຈຂອງມະນຸດ! ເຮົາຈະເປີດເຜີຍທັນທີວ່າ ແມ່ນໃຜເປັນຈິງ ແລະ ແມ່ນໃຜຈອມປອມ. ຢ່າໄດ້ຕື່ນຕົກໃຈ, ທຸກສິ່ງດຳເນີນໄປຕາມເວລາຂອງເຮົາ. ເຮົາຈະບອກພວກເຈົ້າແຕ່ລະຄົນວ່າ ແມ່ນໃຜຕ້ອງການເຮົາຢ່າງຈິງໃຈ ແລະ ແມ່ນໃຜບໍ່ຕ້ອງການເຮົາຢ່າງຈິງໃຈ. ພວກເຈົ້າພຽງແຕ່ກຽມພ້ອມໃຫ້ກິນ, ໃຫ້ດື່ມ ແລະ ຫຍັບເຂົ້າໃກ້ເຮົາ ເມື່ອມາຢູ່ຕໍ່ໜ້າເຮົາ ແລະ ເຮົາຈະປະຕິບັດພາລະກິດຂອງເຮົາດ້ວຍຕົນເອງ. ຢ່າໃຈຮ້ອນເກີນໄປກັບຜົນຕາມມາທີ່ໄວວາ, ພາລະກິດຂອງເຮົາບໍ່ແມ່ນສິ່ງທີ່ສາມາດເຮັດໃຫ້ສຳເລັດພ້ອມກັນທັນທີ. ມີບາດກ້າວຂອງເຮົາ ແລະ ສະຕິປັນຍາຂອງເຮົາຢູ່ພາຍໃນພາລະກິດນັ້ນ ແລະ ດ້ວຍເຫດນັ້ນສະຕິປັນຍາຂອງເຮົາຈຶ່ງສາມາດຖືກເປີດເຜີຍໄດ້. ເຮົາຈະເຮັດໃຫ້ພວກເຈົ້າເຫັນວ່າ ແມ່ນຫຍັງທີ່ຖືກເຮັດໃຫ້ສຳເລັດໂດຍມືຂອງເຮົາ ນັ້ນກໍຄື ການລົງໂທດຄົນຊົ່ວຮ້າຍ ແລະ ການໃຫ້ລາງວັນຄົນດີ. ເຮົາບໍ່ເຂົ້າຂ້າງຄົນໃດຄົນໜຶ່ງຢ່າງແນ່ນອນ. ເຈົ້າຮັກເຮົາຢ່າງຈິງໃຈ, ເຮົາກໍຈະຮັກເຈົ້າຢ່າງຈິງໃຈ ແລະ ສຳລັບຜູ້ທີ່ບໍ່ຮັກເຮົາຢ່າງຈິງໃຈ ຄວາມໂກດຮ້າຍຂອງເຮົາຈະຢູ່ກັບພວກເຂົາຕະຫຼອດໄປ ເພື່ອວ່າພວກເຂົາຈະໄດ້ຈົດຈຳຊົ່ວນິລັນດອນວ່າ ເຮົາເປັນພຣະເຈົ້າທີ່ແທ້ຈິງ, ເປັນພຣະເຈົ້າຜູ້ທີ່ກວດສອບສ່ວນເລິກທີ່ສຸດໃນຫົວໃຈຂອງມະນຸດ. ຢ່າປະພຶດແບບໜຶ່ງໃນເວລາຢູ່ຕໍ່ໜ້າຄົນອື່ນ ແລ້ວປະພຶດອີກແບບເວລາຢູ່ລັບຫຼັງພວກເຂົາ, ເຮົາເຫັນທຸກສິ່ງທີ່ເຈົ້າເຮັດຢ່າງຊັດເຈນ ແລະ ເຖິງແມ່ນວ່າ ເຈົ້າອາດຫຼອກລວງຄົນອື່ນໄດ້ ແຕ່ເຈົ້າບໍ່ສາມາດຫຼອກລວງເຮົາໄດ້. ເຮົາເຫັນທຸກສິ່ງຢ່າງຊັດເຈນ. ມັນເປັນໄປບໍ່ໄດ້ທີ່ເຈົ້າຈະປົກປິດສິ່ງໃດສິ່ງໜຶ່ງ; ທຸກສິ່ງຢູ່ພາຍໃນກຳມືຂອງເຮົາ. ຢ່າຄິດວ່າຕົນເອງສະຫຼາດຫຼາຍເກີນໄປທີ່ເຮັດໃຫ້ການຄຳນວນເລັກໆນ້ອຍໆທີ່ບໍ່ສຳຄັນຂອງເຈົ້າເກີດປະໂຫຍດແກ່ເຈົ້າ. ເຮົາຈະບອກກັບເຈົ້າວ່າ: ບໍ່ວ່າມະນຸດສາມາດມີແຜນການຫຼາຍສໍ່າໃດ ບໍ່ວ່າຈະເປັນພັນ ຫຼື ເປັນໝື່ນໆແຜນການ, ແຕ່ໃນທີ່ສຸດແລ້ວ ພວກເຂົາແມ່ນບໍ່ສາມາດໜີພົ້ນຈາກຝາມືຂອງເຮົາໄດ້. ທຸກສິ່ງ ແລະ ທຸກເຫດການແມ່ນຖືກຄວບຄຸມດ້ວຍມືຂອງເຮົາ, ແລ້ວພຽງມະນຸດຄົນດຽວຈະໜີພົ້ນໄດ້ບໍ! ຢ່າພະຍາຍາມຫຼີກເວັ້ນເຮົາ ຫຼື ລີ້, ຢ່າພະຍາຍາມຫຼອກລໍ້ ຫຼື ປົກປິດ. ສາມາດເປັນໄປໄດ້ບໍ່ວ່າ ເຈົ້າຍັງບໍ່ທັນໄດ້ເຫັນໃບໜ້າທີ່ສະຫງ່າລາສີຂອງເຮົາ, ເຫັນຄວາມໂກດຮ້າຍຂອງເຮົາ ແລະ ການພິພາກສາຂອງເຮົາທີ່ເປີດອອກຢ່າງເປີດເຜີຍ? ຜູ້ໃດກໍຕາມທີ່ບໍ່ຕ້ອງການເຮົາຢ່າງຈິງໃຈ ເຮົາຈະພິພາກສາພວກເຂົາທັນທີ ແລະ ປາສະຈາກຄວາມເມດຕາ. ຄວາມສົງສານຂອງເຮົາໄດ້ມາເຖິງຈຸດສິ້ນສຸດແລ້ວ ແລະ ບໍ່ມີເຫຼືອອີກເລີຍ. ຈົ່ງຢ່າເປັນຄົນໜ້າຊື່ໃຈຄົດອີກຕໍ່ໄປ ແລະ ຈົ່ງເຊົາວິທີທີ່ປ່າເຖື່ອນ ແລະ ໄຮ້ປະໂຫຍດຂອງເຈົ້າ.

ລູກຊາຍຂອງເຮົາເອີຍ, ຈົ່ງເອົາໃຈໃສ່, ໃຊ້ເວລາຢູ່ຕໍ່ໜ້າເຮົາຫຼາຍຂຶ້ນ ແລະ ເຮົາຈະເປັນຜູ້ນຳພາເຈົ້າ. ຢ່າຢ້ານກົວເລີຍ, ຈົ່ງນຳດາບສອງຄົມຂອງເຮົາອອກມາ ແລະ ຕາມຄວາມປະສົງຂອງເຮົາ ຈົ່ງຕໍ່ສູ້ກັບຊາຕານຈົນເຖິງທີ່ສຸດ. ເຮົາຈະປົກປ້ອງເຈົ້າ; ຢ່າວິຕົກກັງວົນໄປເລີຍ. ທຸກສິ່ງທີ່ຖືກປົກປິດຈະຖືກເປີດອອກ ແລະ ຖືກເປີດເຜີຍ. ເຮົາຄືດວງຕາເວັນທີ່ມອບແສງສະຫວ່າງ ໂດຍເຍືອງແສງໄປທົ່ວ

ຄວາມມືດມິດຢ່າງໄຮ້ຄວາມປານີ. ການພິພາກສາຂອງເຮົາໄດ້ເກີດຂຶ້ນທັງໝົດແລ້ວ; ຄຣິສຕະຈັກຄື ສະໜາມຮົບ. ພວກເຈົ້າທຸກຄົນຄວນກຽມພ້ອມ ແລະ ຄວນອຸທິດຕົນເອງທັງໝົດໃສ່ກັບສະໜາມຮົບ ຂັ້ນຕັດສິນເດັດຂາດ; ເຮົາຈະປົກປ້ອງເຈົ້າຢ່າງແນ່ນອນ ເພື່ອວ່າເຈົ້າຈະຕໍ່ສູ້ຢ່າງມີໄຊຊະນະເພື່ອເຮົາ.

ຈົ່ງລະວັງ, ຫົວໃຈຂອງຜູ້ຄົນໃນປັດຈຸບັນນັ້ນຫຼອກລວງ ແລະ ບໍ່ສາມາດທວາຍລ່ວງໜ້າໄດ້ ແລະ ພວກເຂົາບໍ່ມີທາງທີ່ຈະເອົາຊະນະໃຈຂອງຄົນອື່ນໄດ້. ມີພຽງແຕ່ເຮົາເທົ່ານັ້ນທີ່ຢູ່ເພື່ອພວກເຈົ້າຢ່າງແທ້ຈິງ. ບໍ່ມີການຫຼອກລວງໃນຕົວເຮົາ; ຈົ່ງເພິ່ງພາເຮົາ! ລູກຊາຍຂອງເຮົາຈະມີໄຊຊະນະຢ່າງແນ່ນອນໃນ ສະໜາມຮົບຂັ້ນຕັດສິນເດັດຂາດ ແລະ ແນ່ນອນທີ່ສຸດຊາຕານຈະອອກມາກັບຄວາມຕາຍຢ່າງທໍລະມານ. ຢ່າຢ້ານເລີຍ! ເຮົາຄືລິດອຳນາດຂອງເຈົ້າ ແລະ ເຮົາເປັນທຸກສິ່ງຂອງເຈົ້າ. ຢ່າຄິດກັບໄປກັບມາກ່ຽວກັບ ສິ່ງຕ່າງໆ, ເຈົ້າບໍ່ສາມາດໃສ່ໃຈກັບທຸກຄວາມຄິດໄດ້. ເຮົາໄດ້ກ່າວກ່ອນໜ້ານີ້ແລ້ວວ່າ ເຮົາຈະບໍ່ລາກ ດຶງພວກເຈົ້າຕາມເສັ້ນທາງອີກຕໍ່ໄປ ຍ້ອນວ່າເຮົາມີເວລາຈຳກັດເກີນໄປ. ເຮົາບໍ່ມີເວລາທີ່ຈະມາດຶງຫູ ເຈົ້າ ແລະ ຕັກເຕືອນພວກເຈົ້າຕະຫຼອດເວລາ, ມັນເປັນໄປບໍ່ໄດ້! ເຈົ້າຈົ່ງຈັດກຽມຕົນເອງໃຫ້ພ້ອມເພື່ອ ລົງສະໜາມຮົບ. ເຮົາຮັບຜິດຊອບເຈົ້າເຕັມທີ່; ທຸກສິ່ງຢູ່ພາຍໃນມືຂອງເຮົາແລ້ວ. ນີ້ແມ່ນການສູ້ຮົບ ຈົນເຖິງຄວາມຕາຍ ແລະ ແນ່ນອນຕ້ອງມີຝ່າຍໃດຝ່າຍໜຶ່ງຕາຍ. ແຕ່ເຈົ້າຕ້ອງຊັດເຈນໃນສິ່ງນີ້: ເຮົາ ມີໄຊຊະນະ ແລະ ບໍ່ພ່າຍແພ້ຈັກເທື່ອ ແລະ ຊາຕານຈະຈິບຫາຍຢ່າງແນ່ນອນ. ນີ້ແມ່ນວິທີການຂອງ ເຮົາ, ພາລະກິດຂອງເຮົາ, ຄວາມປະສົງຂອງເຮົາ ແລະ ແຜນການຂອງເຮົາ!

ມັນສຳເລັດແລ້ວ! ທຸກສິ່ງສຳເລັດແລ້ວ! ຢ່າອ່ອນແອ ຫຼື ຢ້ານກົວເລີຍ. ເຮົາກັບເຈົ້າ ແລະ ເຈົ້າກັບ ເຮົາ ຈະເປັນກະສັດຕະຫຼອດໄປເປັນນິດ! ພຣະທຳເມື່ອຖືກກ່າວແລ້ວຈະບໍ່ປ່ຽນແປງຈັກເທື່ອ ແລະ ເຫດການຕ່າງໆກໍຈະເກີດຂຶ້ນກັບພວກເຈົ້າໃນໄວໆນີ້. ຈົ່ງເຝົ້າລະວັງ! ເຈົ້າຄວນໄຕ່ຕອງຂໍ້ພຣະທຳທຸກ ແຖວໃຫ້ດີ; ຈົ່ງຢ່າສິ່ງໄສກ່ຽວກັບພຣະທຳຂອງເຮົາອີກຕໍ່ໄປ. ເຈົ້າຕ້ອງຊັດເຈນໃນພຣະທຳເຫຼົ່ານັ້ນ! ເຈົ້າຕ້ອງຈື່ໄວ້, ຈົ່ງໃຊ້ເວລາຢູ່ຕໍ່ໜ້າເຮົາຫຼາຍເທົ່າທີ່ເຈົ້າຈະສາມາດເຮັດໄດ້!

# ບົດທີ 45

ເຈົ້າຕັດສິນອ້າຍເອື້ອຍນ້ອງຂອງເຈົ້າຢ່າງເປີດເຜີຍຄືກັບວ່າບໍ່ມີຫຍັງເກີດຂຶ້ນ. ເຈົ້າບໍ່ຮູ້ຈັກແຍກແຍະຄວາມດີຈາກຄວາມຊົ່ວຮ້າຍແທ້ໆ; ເຈົ້າບໍ່ຮູ້ຈັກຢາງອາຍ! ນີ້ບໍ່ແມ່ນການປະພຶດທີ່ໜ້າດ້ານຢ່າງແຮງ ແລະ ເຮັດຕາມອຳເພີໃຈບໍ? ພວກເຈົ້າແຕ່ລະຄົນສັບສົນ ແລະ ໜັກໃຈ; ເຈົ້າແບກຫາບກະເປົາຫຼາຍເກີນໄປ ແລະ ບໍ່ມີເຮົາພາຍໃນຫົວໃຈຂອງເຈົ້າເລີຍ. ມະນຸດຕາບອດເອີຍ! ຄວາມອຳມະຫິດຂອງເຈົ້າໄດ້ໄປເຖິງຂີດສູງສຸດ, ເມື່ອໃດມັນຈຶ່ງຈະຈົບສິ້ນ?

ເຮົາກ່າວກັບພວກເຈົ້າຈາກຫົວໃຈຂອງເຮົາຄັ້ງແລ້ວຄັ້ງເລົ່າ ແລະ ເຮົາມອບທຸກສິ່ງທີ່ເຮົາມີໃຫ້ກັບພວກເຈົ້າ, ແຕ່ພວກເຈົ້າຂີ້ຖີ່ຫຼາຍ ແລະ ບໍ່ມີຄວາມເປັນມະນຸດແມ່ນແຕ່ໜ້ອຍດຽວ; ນີ້ເປັນສິ່ງທີ່ຢັ່ງເຖິງໄດ້ຍາກແທ້ໆ. ເປັນຫຍັງເຈົ້າຈຶ່ງຍຶດຕິດກັບແນວຄິດຂອງເຈົ້າເອງ? ເປັນຫຍັງເຈົ້າຈຶ່ງບໍ່ໃຫ້ເຮົາມີບ່ອນຢູ່ໃນຕົວເຈົ້າ? ເຮົາຈະທຳຮ້າຍພວກເຈົ້າໄດ້ແນວໃດ? ເຈົ້າບໍ່ຕ້ອງສືບຕໍ່ປະພຶດແບບນີ້, ແທ້ຈິງແລ້ວ ມື້ຂອງເຮົາບໍ່ໄດ້ໄກຈາກປັດຈຸບັນ. ຢ່າເວົ້າໂດຍບໍ່ຄິດ, ປະພຶດໂດຍບໍ່ໄຕ່ຕອງ ຫຼື ຕໍ່ສູ້ ແລະ ສ້າງບັນຫາ; ມີຫຍັງດີທີ່ສິ່ງນີ້ຈະນຳມາສູ່ຊີວິດຂອງພວກເຈົ້າ? ເຮົາກຳລັງບອກພວກເຈົ້າດ້ວຍຄວາມຈິງ, ເຖິງແມ່ນບໍ່ມີແມ່ນແຕ່ຄົນດຽວທີ່ຖືກຊ່ວຍໃຫ້ລອດພົ້ນ ເມື່ອມື້ຂອງເຮົາມາເຖິງ, ເຮົາກໍຍັງຈະຈັດການກັບບັນຫາຕາມແຜນການຂອງເຮົາ. ເຈົ້າຕ້ອງຮູ້ຈັກວ່າ ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ! ບໍ່ມີສິ່ງໃດ, ບໍ່ມີຄົນໃດ, ບໍ່ມີເລື່ອງໃດທີ່ກ້າຂັດຂວາງບາດກ້າວຂອງເຮົາ. ພວກເຈົ້າບໍ່ຄວນຄິດວ່າ ເຮົາບໍ່ມີທາງປະຕິບັດຄວາມປະສົງຂອງເຮົາໄດ້ ຫາກບໍ່ມີພວກເຈົ້າ. ເຮົາສາມາດບອກເຈົ້າວ່າ ຖ້າເຈົ້າປະຕິບັດຕໍ່ຊີວິດຂອງເຈົ້າເອງໃນລັກສະນະດ້ານລົບແບບນີ້, ເຈົ້າຈະພຽງແຕ່ທຳລາຍຊີວິດຂອງເຈົ້າເອງ; ສິ່ງນີ້ຈະບໍ່ແມ່ນຄວາມກັງວົນຂອງເຮົາ.

ພາລະກິດຂອງພຣະວິນຍານບໍລິສຸດໄດ້ຄືບໜ້າຈົນເຖິງຂັ້ນຕອນໃດໜຶ່ງແລ້ວ ແລະ ຄຳພະຍານກໍໄດ້ໄປເຖິງຈຸດສູງສຸດແລ້ວ. ນີ້ຄືຄວາມຈິງທີ່ເຫັນໄດ້ງ່າຍທີ່ສຸດ. ຈົ່ງມືນຕາມົວຂອງພວກເຈົ້າໄວໆ, ຢ່າໃຫ້ຄວາມພຽນພະຍາຍາມຢ່າງເຈັບປວດຂອງເຮົາໃນພວກເຈົ້ານັ້ນສູນເປົ່າ ແລະ ຢ່າໝົກໝຸ້ນກັບຕົນເອງອີກຕໍ່ໄປ. ພວກເຈົ້າມີຄວາມສຸກທີ່ຈະປະຕິບັດສິ່ງດີໆຕໍ່ໜ້າເຮົາ, ແຕ່ເມື່ອເຮົາບໍ່ສະຖິດຢູ່ການກະທຳ ແລະ ການປະພຶດຂອງພວກເຈົ້າຈະສາມາດຍົກຂຶ້ນຕໍ່ໜ້າເຮົາໃຫ້ເຮົາເຫັນໄດ້ບໍ? ເຈົ້າບໍ່ຮູ້ຈັກແຍກແຍະຄວາມດີຈາກຄວາມຊົ່ວຮ້າຍ! ພວກເຈົ້າບໍ່ຟັງເຮົາ, ພວກເຈົ້າເຮັດສິ່ງໜຶ່ງຕໍ່ໜ້າເຮົາ ແລະ ເຮັດອີກຢ່າງລັບຫຼັງເຮົາ. ເຈົ້າຍັງບໍ່ເຂົ້າໃຈວ່າ ເຮົາເປັນພຣະເຈົ້າທີ່ສາມາດເບິ່ງເຫັນຫົວໃຈຂອງມະນຸດ. ເຈົ້າຊ່າງໂງ່ຈ້າຫຼາຍທີ່ສຸດ!

ຕໍ່ໄປ, ໃນຫົນທາງທີ່ຢູ່ເບື້ອງໜ້າ, ເຈົ້າບໍ່ຕ້ອງສ້າງກົນອຸບາຍ ຫຼື ມີສ່ວນຮ່ວມໃນການຫຼອກລວງ ແລະ ຄວາມບໍ່ຊື່ສັດ, ບໍ່ດັ່ງນັ້ນ ຜົນຕາມມາຈະບໍ່ສາມາດຈິນຕະນາການໄດ້! ພວກເຈົ້າທຸກຄົນຍັງບໍ່ເຂົ້າໃຈວ່າ ການຫຼອກລວງ ແລະ ຄວາມບໍ່ຊື່ສັດແມ່ນຫຍັງ. ການກະທຳ ຫຼື ການປະພຶດທຸກຢ່າງທີ່ເຈົ້າບໍ່ຍອມໃຫ້ເຮົາເຫັນ ທີ່ເຈົ້າບໍ່ສາມາດເປີດເຜີຍ ແມ່ນການຫຼອກລວງ ແລະ ຄວາມບໍ່ຊື່ສັດ. ຕອນນີ້ ເຈົ້າ

ຄວນເຂົ້າໃຈສິ່ງນີ້! ຖ້າເຈົ້າມີສ່ວນຮ່ວມໃນການຫຼອກລວງ ແລະ ຄວາມບໍ່ຊື່ສັດໃນອະນາຄົດ, ຢ່າທຳທ່າວ່າບໍ່ເຂົ້າໃຈ, ຖ້າເຈົ້າເຮັດແບບນີ້, ເຈົ້າກໍຈະເຮັດຜິດໂດຍຮູ້ຕົວ ແລະ ເຈົ້າຍິ່ງຈະຜິດຂຶ້ນອີກສອງເທົ່າ. ສິ່ງນີ້ພຽງແຕ່ຈະນຳເຈົ້າໄປສູ່ການຖືກເຜົາໄໝ້ດ້ວຍໄຟ ຫຼື ຍິ່ງຮ້າຍແຮງກວ່ານັ້ນກໍຄື ການທຳລາຍຕົວເຈົ້າເອງ. ເຈົ້າຕ້ອງເຂົ້າໃຈ! ສິ່ງທີ່ພວກເຈົ້າກຳລັງຜະເຊີນໃນປັດຈຸບັນແມ່ນການຕີສອນແຫ່ງຄວາມຮັກ; ມັນບໍ່ແມ່ນການພິພາກສາຢ່າງບໍ່ມີຫົວໃຈແນ່ນອນ. ຖ້າເຈົ້າບໍ່ສາມາດເຫັນສິ່ງນີ້ໄດ້, ແລ້ວເຈົ້າກໍເປັນຕາເວດທະນາເກີນໄປ ແລະ ເຈົ້າແມ່ນໝົດຫວັງແທ້ໆ. ຖ້າເຈົ້າບໍ່ເຕັມໃຈທີ່ຈະຮັບເອົາການຕີສອນແຫ່ງຄວາມຮັກ, ແລ້ວສິ່ງດຽວທີ່ຈະສາມາດເກີດຂຶ້ນໄດ້ກັບພວກເຈົ້າກໍຄືການພິພາກສາຢ່າງບໍ່ມີຫົວໃຈ. ເມື່ອສິ່ງນັ້ນເກີດຂຶ້ນ, ຢ່າຕຳນິ ວ່າເຮົາບໍ່ໄດ້ບອກເຈົ້າ. ບໍ່ແມ່ນເຮົາທີ່ລະເລີຍຕໍ່ໜ້າທີ່ຂອງເຮົາ ແຕ່ກົງກັນຂ້າມ ມັນແມ່ນພວກເຈົ້າທີ່ບໍ່ຟັງພຣະທຳຂອງເຮົາ ແລະ ບໍ່ປະຕິບັດຕາມພຣະທຳຂອງເຮົາ. ເຮົາບອກສິ່ງນີ້ກັບເຈົ້າໃນຕອນນີ້ ເພື່ອວ່າຜູ້ຄົນຈະບໍ່ກ່າວໂທດເຮົາໃນພາຍຫຼັງ.

# ບົດທີ 46

ໃຜກໍຕາມທີ່ເສຍສະຫຼະ ແລະ ຖວາຍຕົນເອງເພື່ອເຮົາຢ່າງຈິງໃຈ, ເຮົາຈະປົກປ້ອງເຈົ້າຈົນເຖິງທີ່ສຸດຢ່າງແນ່ນອນ; ມືຂອງເຮົາຈະຈັບເຈົ້າໄວ້ຢ່າງແນ່ນອນ ເພື່ອວ່າ ເຈົ້າຈະສະຫງົບສຸກຕະຫຼອດໄປ, ມີຄວາມເບີກບານຢູ່ສະເໝີ ແລະ ແຕ່ລະມື້ ເຈົ້າຈະໄດ້ຮັບແສງສະຫວ່າງ ແລະ ການເປີດເຜີຍຂອງເຮົາ. ແນ່ນອນວ່າ ເຮົາຈະເພີ່ມພອນຂອງເຮົາໃຫ້ກັບເຈົ້າເປັນສອງເທົ່າ ເພື່ອວ່າເຈົ້າຈະມີສິ່ງທີ່ເຮົາມີ ແລະ ຄອບຄອງສິ່ງທີ່ເຮົາເປັນ. ສິ່ງທີ່ຖືກມອບໃຫ້ເຈົ້າແມ່ນຊີວິດຂອງເຈົ້າ ແລະ ບໍ່ມີໃຜສາມາດເອົາມັນໄປຈາກເຈົ້າໄດ້. ຈົ່ງຢ່ານຳບັນຫາ ຫຼື ຄວາມອຸກໃຈມາສູ່ຕົນເອງ; ພາຍໃນຕົວເຮົາມີພຽງແຕ່ຄວາມສະຫງົບສຸກ ແລະ ຄວາມປິຕິຍິນດີ. ເຮົາຮັກເຈົ້າຢ່າງຈິງໃຈ, ລູກເອີຍ, ເຈົ້າຜູ້ທີ່ເອົາໃຈໃສ່ ແລະ ເຊື່ອຟັງເຮົາຢ່າງຈິງໃຈ. ຄົນທີ່ເຮົາກຽດຊັງທີ່ສຸດແມ່ນພວກໜ້າຊື່ໃຈຄົດ; ເຮົາຈະກວາດລ້າງພວກເຂົາອອກຢ່າງແນ່ນອນ. ເຮົາຈະທຳລາຍກິ່ນເໝັນຂອງແຜ່ນດິນໂລກອອກຈາກເຮືອນຂອງເຮົາ ແລະ ທຳລາຍທຸກສິ່ງທີ່ເຮົາບໍ່ສາມາດທົນເບິ່ງໄດ້.

ຢູ່ໃນຫົວໃຈຂອງເຮົາ, ເຮົາຮູ້ຈັກຢ່າງແທ້ຈິງວ່າ ແມ່ນໃຜຕ້ອງການເຮົາຢ່າງຈິງໃຈ ແລະ ແມ່ນໃຜທີ່ບໍ່ຕ້ອງການເຮົາ. ເຖິງວ່າພວກເຂົາອາດຈະປົດບັງຕົນເອງໄດ້ເປັນຢ່າງດີ ແລະ ສວມເຄື່ອງແຕ່ງກາຍປອມຕົວຢ່າງສະຫຼາດ ແລະ ຍັງສາມາດເວົ້າໄດ້ວ່າ ພວກເຂົາເປັນນັກສະແດງທີ່ດີເດັ່ນທີ່ສຸດໃນໂລກ, ແຕ່ເຮົາເຫັນທຸກສິ່ງທີ່ພວກເຂົາມີຢູ່ໃນໃຈຂອງພວກເຂົາຢ່າງຊັດເຈນ. ຢ່າຄິດວ່າ ເຮົາບໍ່ຮູ້ວ່າແມ່ນຫຍັງທີ່ຢູ່ໃນຫົວໃຈຂອງເຈົ້າ; ໃນຄວາມເປັນຈິງ ບໍ່ມີໃຜທີ່ສາມາດເຂົ້າໃຈໄດ້ຢ່າງຊັດເຈນຫຼາຍກວ່າເຮົາ. ເຮົາຮູ້ວ່າແມ່ນຫຍັງທີ່ຢູ່ໃນຫົວໃຈຂອງເຈົ້າ; ເຈົ້າເຕັມໃຈທີ່ຈະຖວາຍຕົນເອງໃຫ້ກັບພຣະເຈົ້າ ແລະ ເສຍສະຫຼະເພື່ອພຣະເຈົ້າ, ພຽງແຕ່ເຈົ້າບໍ່ປາຖະໜາທີ່ຈະໃຊ້ຄຳເວົ້າອ່ອນຫວານເພື່ອເຮັດໃຫ້ຄົນອື່ນດີໃຈ. ຈົ່ງເບິ່ງໃຫ້ຊັດເຈນ! ອານາຈັກໃນປັດຈຸບັນຈະບໍ່ຖືກສ້າງໂດຍກຳລັງຂອງມະນຸດ, ແຕ່ຈະຖືກສ້າງຂຶ້ນໃຫ້ສຳເລັດໂດຍນຳໃຊ້ສະຕິປັນຍາທີ່ນອກເໜືອຄຳບັນຍາຍ ແລະ ຄວາມພະຍາຍາມຢ່າງເຈັບປວດຂອງເຮົາ. ໃຜກໍຕາມທີ່ມີສະຕິປັນຍາ ແລະ ຄອບຄອງສິ່ງທີ່ເຮົາເປັນຢູ່ພາຍໃນພວກເຂົາ ກໍຈະມີສ່ວນຮ່ວມໃນການສ້າງອານາຈັກ. ຈົ່ງຢ່າກັງວົນອີກຕໍ່ໄປ; ເຈົ້າກັງວົນຈົນບໍ່ຫຼາຍຢູ່ສະເໝີ ໂດຍບໍ່ສົນໃຈຕໍ່ການເປີດເຜີຍ ຫຼື ການເຍືອງທາງຈາກຄວາມປະສົງຂອງເຮົາທີ່ຢູ່ພາຍໃນເຈົ້າ. ຈົ່ງຢ່າເຮັດແບບນັ້ນອີກຕໍ່ໄປເລີຍ. ບໍ່ວ່າຈະແມ່ນຫຍັງກໍຕາມ, ຈົ່ງສົນທະນາກັບເຮົາໃຫ້ຫຼາຍຂຶ້ນກ່ຽວກັບບັນຫາຕ່າງໆເພື່ອຫຼີກເວັ້ນການທົນທຸກທໍລະມານຈາກການກະທຳຂອງເຈົ້າເອງ.

ບາງເທື່ອ ຕາມຜິວເຜີນມັນເບິ່ງຄືກັບວ່າ ເຮົາເມີນເສີຍຕໍ່ທຸກຄົນ, ແຕ່ເຈົ້າຮູ້ສິ່ງທີ່ເຮົາຄິດຢູ່ຂ້າງໃນບໍ? ເຮົາຍົກສູງຄົນຖ່ອມຕົນຢູ່ສະເໝີ ແລະ ທຳລາຍຄົນທີ່ທະນົງຕົນ ແລະ ສຳຄັນຕົວເອງລົງ. ຄົນທີ່ບໍ່ເຂົ້າໃຈຄວາມປະສົງຂອງເຮົາຈະທົນທຸກຕໍ່ການສູນເສຍຢ່າງໃຫຍ່. ເຈົ້າຕ້ອງຮູ້ວ່າ ນີ້ແມ່ນສິ່ງທີ່ເຮົາເປັນ ແລະ ນີ້ຄືອຸປະນິໄສຂອງເຮົາ, ບໍ່ມີໃຜສາມາດປ່ຽນແປງມັນໄດ້ ແລະ ບໍ່ມີໃຜສາມາດເຂົ້າໃຈມັນຢ່າງລະອຽດໄດ້. ພຽງແຕ່ຜ່ານການເປີດເຜີຍຂອງເຮົາເທົ່ານັ້ນ ເຈົ້າຈຶ່ງສາມາດເຂົ້າໃຈໄດ້, ບໍ່ດັ່ງນັ້ນ ເຈົ້າຈະ

ບໍ່ມີທາງເຂົ້າໃຈມັນໄດ້ຢ່າງລະອຽດ; ຢ່າອວດດີເລີຍ. ເຖິງແມ່ນວ່າ ບາງຄົນອາດຈະເວົ້າໄດ້ດີ, ແຕ່ຫົວໃຈຂອງພວກເຂົາແມ່ນບໍ່ໄດ້ຊື່ສັດຕໍ່ເຮົາ ແລະ ຂັດຄ້ານເຮົາຢ່າງລັບໆຢູ່ຕະຫຼອດເວລາ; ເຮົາຈະພິພາກສາຄົນປະເພດນີ້.

ເຈົ້າຢ່າພຽງແຕ່ໃສ່ໃຈກັບການເຮັດຕາມຄົນອື່ນເທົ່ານັ້ນ, ເຈົ້າຄວນສົນໃຈກັບທ່າທາງຂອງເຮົາ ແລະ ວິທີການຂອງເຮົາ. ດ້ວຍວິທີນີ້ເທົ່ານັ້ນ ເຈົ້າຈຶ່ງຈະເຂົ້າໃຈຄວາມປະສົງຂອງເຮົາເທື່ອລະໜ້ອຍ; ແລ້ວການກະທຳຂອງເຈົ້າຈຶ່ງຈະສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ເຈົ້າຈະບໍ່ສ້າງຄວາມຜິດພາດອີກຕໍ່ໄປ. ຈົ່ງຢ່າຮ້ອງໄຫ້ ຫຼື ໂສກເສົ້າເສຍໃຈເລີຍ; ເຮົາເຫັນທຸກສິ່ງທີ່ເຈົ້າເຮັດຢ່າງຊັດເຈນ, ເຫັນທຸກພຶດຕິກຳຂອງເຈົ້າ ແລະ ທຸກສິ່ງທີ່ເຈົ້າຄິດ ແລະ ເຮົາຮູ້ຈັກຄວາມຕ້ອງການ ແລະ ຄວາມປາຖະໜາທີ່ຈິງໃຈຂອງເຈົ້າ; ແລ້ວເຮົາຈະໃຊ້ເຈົ້າ. ປັດຈຸບັນນີ້ແມ່ນເວລາທີ່ສຳຄັນຫຼາຍ; ເວລາທີ່ຈະທົດສອບເຈົ້າແມ່ນໄດ້ມາເຖິງແລ້ວ. ເຈົ້າຍັງບໍ່ເຫັນອີກບໍ? ເຈົ້າຍັງບໍ່ເຂົ້າໃຈເທື່ອບໍ? ເປັນຫຍັງເຮົາຈຶ່ງມີທັດສະນະແບບນັ້ນກັບເຈົ້າ? ເຈົ້າຮູ້ຢູ່ບໍ? ເຮົາໄດ້ເປີດເຜີຍສິ່ງເຫຼົ່ານີ້ໃຫ້ກັບເຈົ້າ ແລະ ເຈົ້າກໍມີຄວາມເຂົ້າໃຈພຽງເລັກນ້ອຍ. ແຕ່ຢ່າໄດ້ຢຸດ, ຈົ່ງສືບຕໍ່ດຳເນີນການເຂົ້າຫາຂອງເຈົ້າ ແລະ ເຮົາຈະສືບຕໍ່ສ່ອງແສງສະຫວ່າງໃຫ້ແກ່ເຈົ້າ. ເຈົ້າເຂົ້າໃຈບໍວ່າ ຍິ່ງເຈົ້າເຊື່ອຟັງ ແລະ ໃສ່ໃຈກັບເຮົາຫຼາຍສໍ່າໃດ, ເຈົ້າກໍຍິ່ງຈະມີຄວາມສະຫວ່າງຢູ່ພາຍໃນຫຼາຍສໍ່ານັ້ນ ແລະ ເຈົ້າຍິ່ງຈະມີການເປີດເຜີຍຫຼາຍຂຶ້ນຢູ່ຂ້າງໃນ? ເຈົ້າຮູ້ບໍວ່າ ຍິ່ງເຈົ້າເຊື່ອຟັງ ແລະ ໃສ່ໃຈກັບເຮົາຫຼາຍສໍ່າໃດ, ເຈົ້າກໍຍິ່ງຈະມີຄວາມຮູ້ຫຼາຍຂຶ້ນກ່ຽວກັບເຮົາ ແລະ ຍິ່ງຈະໄດ້ຮັບປະສົບການຫຼາຍສໍ່ານັ້ນ? ຈົ່ງຢ່າຍຶດຕິດກັບແນວຄິດຂອງເຈົ້າຢູ່ສະເໝີ; ການເຮັດສິ່ງນີ້ຈະຕັນການລົ້ນໄຫຼຂອງນໍ້າແຫ່ງຊີວິດຂອງເຮົາ ແລະ ກີດຂວາງການປະຕິບັດຕາມຄວາມປະສົງຂອງເຮົາ. ເຈົ້າຕ້ອງຮູ້ວ່າ ການຮັບເອົາຄົນໜຶ່ງຢ່າງສົມບູນບໍ່ແມ່ນເລື່ອງງ່າຍດາຍ. ຈົ່ງຢ່າຄິດໄປໃນທາງທີ່ຫຍຸ້ງຍາກ. ຈົ່ງຕິດຕາມເທົ່ານັ້ນ ແລະ ຢ່າຄິດໃຫ້ມັນຍາກອີກເລີຍ!

# ບົດທີ 47

ພຣະເຈົ້າອົງຊົງລິດທານຸພາບສູງສຸດແຫ່ງຄວາມຊອບທຳ, ຜູ້ຊົງລິດທານຸພາບສູງສຸດ! ໃນພຣະອົງບໍ່ມີສິ່ງໃດທີ່ລີ້ລັບຢ່າງແນ່ນອນ. ຄວາມເລິກລັບແຕ່ລະຢ່າງໃນຕົວພຣະອົງ ຕັ້ງແຕ່ປະຖົມມະການຈົນເຖິງຊົ່ວນິດນິລັນດອນ ທີ່ມະນຸດບໍ່ເຄີຍເປີດເຜີຍມາກ່ອນ ຕອນນີ້ແມ່ນໄດ້ສະແດງອອກໃຫ້ເຫັນຢ່າງຈະແຈ້ງ ແລະ ຊັດເຈນ. ພວກເຮົາບໍ່ຈຳເປັນຕ້ອງສະແຫວງຫາ ແລະ ງົມຫາອີກຕໍ່ໄປ, ຍ້ອນວ່າໃນປັດຈຸບັນນີ້ຕົວຕົນຂອງພຣະອົງໄດ້ສະແດງອອກຕໍ່ພວກເຮົາຢ່າງເປີດເຜີຍ, ພຣະອົງຄືຄວາມເລິກລັບທີ່ໄດ້ຖືກເປີດເຜີຍ, ພຣະອົງຄືພຣະເຈົ້າທີ່ແທ້ຈິງ ແລະ ຍ້ອນໃນປັດຈຸບັນ ພຣະອົງໄດ້ມາຢູ່ຕໍ່ໜ້າພວກເຮົາ ແລະການທີ່ພວກເຮົາໄດ້ເຫັນຕົວຕົນຂອງພຣະອົງກໍຄືໄດ້ເຫັນຄວາມເລິກລັບທຸກຢ່າງແຫ່ງອານາຈັກຝ່າຍວິນຍານ. ນີ້ແມ່ນສິ່ງທີ່ບໍ່ມີໃຜສາມາດຈິນຕະນາການໄດ້ຢ່າງແທ້ຈິງ! ພຣະອົງຢູ່ທ່າມກາງພວກເຮົາໃນປັດຈຸບັນ, ແມ່ນແຕ່ຢູ່ພາຍໃນຕົວພວກເຮົາ ແລະ ໃກ້ຊິດກັບພວກເຮົາຫຼາຍທີ່ສຸດ; ສິ່ງນີ້ຂັດກັບຄຳອະທິບາຍ ແລະ ຄວາມເລິກລັບທີ່ຢູ່ພາຍໃນສິ່ງນີ້ແມ່ນບໍ່ມີຈຳກັດ!

ພຣະເຈົ້າອົງຊົງລິດທານຸພາບສູງສຸດໄດ້ເຮັດໃຫ້ແຜນການຄຸ້ມຄອງຂອງພຣະອົງສຳເລັດ. ພຣະອົງເປັນກະສັດທີ່ມີໄຊຊະນະແຫ່ງຈັກກະວານ. ທຸກສິ່ງ ແລະ ທຸກບັນຫາຢູ່ໃນການຄວບຄຸມໃນກຳມືຂອງພຣະອົງ. ທຸກຄົນຄຸເຂົ່ານະມັດສະການ ແລະ ສັນລະເສີນພຣະນາມຂອງພຣະເຈົ້າທີ່ແທ້ຈິງ ນັ້ນກໍຄືພຣະເຈົ້າອົງຊົງລິດທານຸພາບສູງສຸດ. ດ້ວຍພຣະທຳທີ່ອອກຈາກປາກຂອງພຣະອົງ, ທຸກສິ່ງຖືກເຮັດໃຫ້ສຳເລັດ. ເປັນຫຍັງພວກເຈົ້າຈຶ່ງນິ້ງເສີຍ, ບໍ່ສາມາດເຮັດໃຫ້ຕົນເອງປະຕິບັດພາລະກິດກັບພຣະອົງຢ່າງຈິງໃຈ, ຮ່ວມກັບພຣະອົງຢ່າງໃກ້ຊິດ ແລະ ໄປສູ່ຄວາມສະຫງ່າລາສີຮ່ວມກັບພຣະອົງ? ເປັນໄປໄດ້ບໍ່ວ່າ ເຈົ້າເຕັມໃຈທີ່ຈະທົນທຸກ? ເຕັມໃຈທີ່ຈະຖືກຖິ້ມ? ພວກເຈົ້າຄິດວ່າ ເຮົາບໍ່ຮູ້ບໍວ່າ ແມ່ນໃຜທີ່ອຸທິດໃຫ້ກັບເຮົາຢ່າງຈິງໃຈ ແລະ ແມ່ນໃຜທີ່ເສຍສະຫຼະຕົນເອງໃຫ້ກັບເຮົາຢ່າງຈິງໃຈ? ຄົນໂງ່ເອີຍ! ຊ່າງໂງ່ຈ້າແທ້! ພວກເຈົ້າບໍ່ສາມາດເຂົ້າໃຈເຈດຕະນາຂອງເຮົາ, ແລ້ວແຮງໄກທີ່ພວກເຈົ້າຈະເອົາໃຈໃສ່ຕໍ່ພາລະຂອງເຮົາ, ພວກເຈົ້າມີແຕ່ເຮັດໃຫ້ເຮົາກັງວົນ ແລະ ໃຫ້ເຮົາເຮັດວຽກໜັກເພື່ອພວກເຈົ້າຢູ່ສະເໝີ. ເມື່ອໃດມັນຈຶ່ງຈະຈົບສິ້ນ?

ການດຳລົງຊີວິດຕາມເຮົາທຸກສິ່ງ, ການເປັນພະຍານໃຫ້ກັບເຮົາໃນທຸກສິ່ງ, ການເຮັດເຊັ່ນນັ້ນໝາຍເຖິງການອ້າປາກອອກ ແລະ ເຊື່ອຄຳເວົ້າສອງສາມຄຳເຂົ້າກັນເທົ່ານັ້ນບໍ? ເຈົ້າບໍ່ຮູ້ຄວາມແຕກຕ່າງລະຫວ່າງດີ ແລະ ຊົ່ວ! ສິ່ງຕ່າງໆທີ່ເຈົ້າເຮັດ ເຈົ້າກໍເຮັດໂດຍປາສະຈາກເຮົາ, ແລ້ວແຮງໄກທີ່ເຮົາຈະຢູ່ໃນຊີວິດປະຈຳວັນຂອງເຈົ້າ. ເຮົາຮູ້ວ່າ ພວກເຈົ້າບໍ່ຈິງຈັງກັບການເຊື່ອໃນພຣະເຈົ້າເລີຍ ແລະ ດ້ວຍເຫດນັ້ນ ສິ່ງເຫຼົ່ານີ້ຈຶ່ງເປັນໝາກຜົນທີ່ພວກເຈົ້າມີ! ເຈົ້າຍັງບໍ່ຕື່ນ ແລະ ຖ້າເຈົ້າສືບຕໍ່ເປັນແບບນີ້, ເຈົ້າຈະເຮັດໃຫ້ຊື່ສຽງຂອງເຮົາເສື່ອມເສຍ.

ໃຫ້ຖາມຕົນເອງເບິ່ງວ່າ, ໃນເວລາທີ່ເຈົ້າກ່າວ ເຮົາຢູ່ບ່ອນນັ້ນກັບເຈົ້າບໍ? ເມື່ອເຈົ້າກິນ ຫຼື ນຸ່ງເຄື່ອງຂອງເຈົ້າ ຄຳສັນຍາຂອງເຮົາຢູ່ໃນທີ່ນັ້ນບໍ? ພວກເຈົ້າຊ່າງບໍ່ມີຄວາມຄິດແທ້ໆ! ເມື່ອບັນຫາຂອງເຈົ້າ

ບໍ່ຖືກກ່າວເຖິງໂດຍກົງ ເຈົ້າກໍສະແດງທາດແທ້ຂອງເຈົ້າອອກມາ ແລະ ບໍ່ມີໃຜໃນພວກເຈົ້າເຕັມໃຈຍອມຮັບເລີຍ. ຖ້າມັນບໍ່ໄດ້ເປັນແບບນີ້, ພວກເຈົ້າກໍຈະຄິດວ່າຕົນເອງຍິ່ງໃຫຍ່ ແລະ ເຈົ້າມີຫຼາຍສິ່ງທີ່ຢູ່ພາຍໃນເຈົ້າ. ເຈົ້າຮູ້ບໍວ່າ ເຈົ້າເຕັມໄປດ້ວຍຄວາມຂີ້ຮ້າຍຂອງຊາຕານຢູ່ພາຍໃນ? ຈົ່ງປະຕິບັດພາລະກິດກັບເຮົາເພື່ອຖອກເທທຸກສິ່ງເຫຼົ່ານີ້ອອກໄປ. ຈົ່ງໃຫ້ສິ່ງທີ່ເຮົາເປັນ ຄອບຄອງເຈົ້າຢູ່ພາຍໃນຢ່າງສົມບູນ, ເພື່ອວ່າ ເຈົ້າຈະສາມາດດໍາລົງຊີວິດຕາມເຮົາ, ເປັນພະຍານໃຫ້ກັບເຮົາດ້ວຍຄວາມເປັນຈິງຍິ່ງຂຶ້ນ ແລະ ເປັນເຫດຜົນເຮັດໃຫ້ຫຼາຍຄົນຍອມມາຢູ່ຕໍ່ໜ້າບັນລັງຂອງເຮົາ ຍ້ອນເຈົ້າ. ພວກເຈົ້າຕ້ອງຮູ້ວ່າພາລະທີ່ແບກຫາບຢູ່ເທິງບ່າຂອງພວກເຈົ້ານັ້ນໜັກສໍ່າໃດ ນັ້ນກໍຄື ການສັນລະເສີນພຣະຄຣິດ, ການສະແດງອອກເຖິງພຣະຄຣິດ, ການເປັນພະຍານເຖິງພຣະຄຣິດ, ເພື່ອວ່າ ຜູ້ຄົນຈໍານວນຫຼວງຫຼາຍຈະໄດ້ຮັບຄວາມລອດພົ້ນ ແລະ ອານາຈັກຂອງເຮົາກໍຈະຍັງໝັ້ນຄົງ ແລະ ບໍ່ຫວັ່ນໄຫວ. ເຮົາກ່າວສິ່ງນີ້ອອກມາທັງໝົດກໍເພື່ອບໍ່ໃຫ້ພວກເຈົ້າວຸ້ນວາຍໃຈ ໂດຍບໍ່ເຂົ້າໃຈເຖິງຄວາມສໍາຄັນຂອງພາລະກິດໃນປັດຈຸບັນ.

ບໍ່ສາມາດຊ່ວຍຕົນເອງໄດ້ເມື່ອຜະເຊີນກັບສິ່ງຕ່າງໆ ຄືກັບມົດທີ່ຢູ່ໃນໝໍ້ຂາງຮ້ອນ, ແລ່ນວົກວົນໄປມາ, ນີ້ແມ່ນອຸປະນິໄສຂອງພວກເຈົ້າ. ຈາກພາຍນອກ ພວກເຈົ້າເບິ່ງຄືກັບຜູ້ໃຫຍ່, ແຕ່ຊີວິດຂ້າງໃນຂອງພວກເຈົ້າຄືກັບເດັກນ້ອຍ, ມີແຕ່ສ້າງບັນຫາ ເພີ່ມພາລະໃຫ້ກັບເຮົາ. ຖ້າເຮົາບໍ່ສົນໃຈຫຍັງເລີຍ, ພວກເຈົ້າກໍສ້າງບັນຫາ, ແມ່ນບໍ່? ຈົ່ງຢ່າຄິດວ່າຕົນເອງເປັນຄົນຊອບທໍາເລີຍ. ສິ່ງທີ່ເຮົາກ່າວແມ່ນຄວາມຈິງ. ຢ່າຄິດສະເໝີວ່າ ເຮົາກໍາລັງສັ່ງສອນພວກເຈົ້າຢູ່ຕະຫຼອດເວລາ ຄືກັບວ່າເຮົາກໍາລັງໃຊ້ຂໍ້ພຣະທໍາທີ່ຟັງຄືວ່າໃຫຍ່ໂຕ; ນີ້ແມ່ນສະພາບທີ່ແທ້ຈິງຂອງພວກເຈົ້າ.

# ບົດທີ 48

ເຮົາກັງວົນໃຈ, ມີຈັກຄົນໃນພວກເຈົ້າທີ່ສາມາດເປັນຈິດໜຶ່ງໃຈດຽວກັບເຮົາໄດ້? ພວກເຈົ້າບໍ່ໃສ່ໃຈໃນພຣະທຳຂອງເຮົາ, ເມີນເສີຍ ແລະ ຂາດຄວາມເອົາໃຈໃສ່ທັງໝົດ, ກົງກັນຂ້າມ ເອົາໃຈໃສ່ແຕ່ສິ່ງຜິວເຜີນຕ່າງໆຂອງຕົວເຈົ້າເອງເທົ່ານັ້ນ. ເຈົ້າຖືວ່າການເບິ່ງແຍງດ້ວຍຄວາມເຈັບປວດ ແລະ ຄວາມພະຍາຍາມຂອງເຮົາເປັນເໝືອນດັ່ງຂີ້ເຫຍື້ອ; ພວກເຈົ້າບໍ່ມີຄວາມສຳນຶກຜິດເລີຍບໍ? ພວກເຈົ້າທຸກຄົນເປັນຄົນບໍ່ມີຄວາມຮູ້ ແລະ ຂາດເຫດຜົນ; ພວກເຈົ້າເປັນຄົນໂງ່ ແລະ ບໍ່ສາມາດເຮັດໃຫ້ເຮົາພໍໃຈໄດ້ເລີຍ. ເຮົາເພື່ອພວກເຈົ້າໂດຍສິ້ນເຊີງ, ແລ້ວພວກເຈົ້າເພື່ອເຮົາຫຼາຍປານໃດ? ພວກເຈົ້າເຂົ້າໃຈຄວາມຕັ້ງໃຈຂອງເຮົາຜິດ ແລະ ນີ້ຄືຄວາມຕາບອດ ແລະ ການໄຮ້ຄວາມສາມາດທີ່ຈະເບິ່ງທະລຸສິ່ງຕ່າງໆໄດ້ຢ່າງແທ້ຈິງ, ເຮັດໃຫ້ເຮົາເປັນຫ່ວງພວກເຈົ້າ ແລະ ໃຊ້ເວລາກັບພວກເຈົ້າຢູ່ສະເໝີ. ປັດຈຸບັນນີ້, ພວກເຈົ້າສາມາດສະຫຼະເວລາ ແລະ ອຸທິດເວລາຂອງພວກເຈົ້າເພື່ອເຮົາໄດ້ຫຼາຍປານໃດ? ພວກເຈົ້າຄວນຖາມຄຳຖາມເຫຼົ່ານີ້ກັບຕົວພວກເຈົ້າເອງຕື່ມອີກເລື້ອຍໆ.

ຄວາມຕັ້ງໃຈຂອງເຮົາທັງໝົດແມ່ນກ່ຽວກັບພວກເຈົ້າ, ພວກເຈົ້າເຂົ້າໃຈສິ່ງນີ້ແທ້ບໍ? ຖ້າພວກເຈົ້າເຂົ້າໃຈມັນຢ່າງແທ້ຈິງ, ພວກເຈົ້າຄົງຈະເຂົ້າໃຈຄວາມຕັ້ງໃຈຂອງເຮົາ ແລະ ໄດ້ຄຳນຶງເຖິງພາລະຂອງເຮົາມາດົນແລ້ວ. ຢ່າຖືເບົາອີກເລີຍ ຫຼື ພວກເຈົ້າຈະບໍ່ມີພຣະວິນຍານບໍລິສຸດປະຕິບັດພາລະກິດໃນຕົວພວກເຈົ້າ ເຊິ່ງຈະເຮັດໃຫ້ຈິດວິນຍານຂອງພວກເຈົ້າຕາຍ ແລະ ຕົກສູ່ດິນແດນມໍລະນາ. ນັ້ນມັນບໍ່ໂຫດຮ້າຍເກີນໄປສຳລັບພວກເຈົ້າບໍ? ບໍ່ຈຳເປັນທີ່ເຮົາຈະຕ້ອງເຕືອນພວກເຈົ້າອີກ. ເຈົ້າຄວນຄົ້ນຫາມະໂນທຳຂອງເຈົ້າ ແລະ ຖາມຕົວເອງວ່າ: ເປັນຍ້ອນເຮົາເສຍໃຈນຳພວກເຈົ້າທຸກຄົນຫຼາຍເກີນໄປບໍ ຫຼື ວ່າ ພວກເຈົ້າເປັນໜີ້ເຮົາຫຼາຍເກີນໄປກັນແທ້? ຢ່າສັບສົນລະຫວ່າງຖືກ ແລະ ຜິດ; ຈົ່ງຢ່າຂາດຄວາມຮູ້ສຶກ! ຕອນນີ້ບໍ່ແມ່ນເວລາທີ່ຈະຕໍ່ສູ້ເພື່ອອຳນາດ ແລະ ຜົນກຳໄລ ຫຼື ມີສ່ວນຮ່ວມໃນການວາງແຜນຊົ່ວຮ້າຍ. ກົງກັນຂ້າມ ພວກເຈົ້າຕ້ອງປະຖິ້ມສິ່ງເຫຼົ່ານີ້ທີ່ເປັນອັນຕະລາຍຫຼາຍຕໍ່ຊີວິດຂອງພວກເຈົ້າໂດຍໄວ ແລະ ສະແຫວງຫາເພື່ອເຂົ້າສູ່ຄວາມເປັນຈິງ. ພວກເຈົ້າຊ່າງຖືເບົາແທ້! ພວກເຈົ້າບໍ່ສາມາດເຂົ້າໃຈຈິດໃຈຂອງເຮົາ ຫຼື ຮັບຮູ້ຄວາມຕັ້ງໃຈຂອງເຮົາ. ມີຫຼາຍຢ່າງທີ່ເຮົາບໍ່ຄວນເວົ້າອອກໄປ, ແຕ່ວ່າພວກເຈົ້າເປັນຄົນທີ່ສັບສົນຜູ້ບໍ່ສາມາດເຂົ້າໃຈໄດ້, ສະນັ້ນ ເຮົາຈຶ່ງຕ້ອງໄດ້ເວົ້າມັນຊ້ຳແລ້ວຊ້ຳອີກ ແລະ ເຖິງປານນັ້ນ ພວກເຈົ້າກໍ່ຍັງບໍ່ເຮັດໃຫ້ເຮົາພໍໃຈ.

ນັບເບິ່ງພວກເຈົ້າເທື່ອລະຄົນ, ມີພວກເຈົ້າຈັກຄົນທີ່ສາມາດຄຳນຶງເຖິງຫົວໃຈຂອງເຮົາໄດ້ຢ່າງແທ້ຈິງ?

# ບົດທີ 49

ໃນການເຮັດໜ້າທີ່ປະສານງານ, ຄົນໜຶ່ງຕ້ອງໄດ້ປະສານງານຢ່າງຖືກຕ້ອງ, ມີພະລັງ ແລະ ຢ່າງມີຊີວິດຊີວາ. ຍິ່ງໄປກວ່ານັ້ນ ຄົນໆໜຶ່ງຕ້ອງມີຄວາມເຂັ້ມແຂງ, ມີພະລະກຳລັງ ແລະ ເຕັມໄປດ້ວຍຄວາມໝັ້ນໃຈ ເພື່ອວ່າ ເມື່ອພວກເຂົາເຫັນ, ຄົນອື່ນໆຈະໄດ້ຮັບການຕອບສະໜອງ ແລະ ຈະໄດ້ອີ່ມໜຳສຳລານ. ເພື່ອຮັບໃຊ້ເຮົາ ເຈົ້າຕ້ອງຮັບໃຊ້ດັ່ງທີ່ເຮົາປະສົງ, ບໍ່ພຽງແຕ່ເຮັດຕາມໃຈເຮົາເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນ ຕ້ອງປະຕິບັດຕາມຄວາມຕັ້ງໃຈຂອງເຮົາ ເພື່ອວ່າ ເຮົາຈະໄດ້ພໍໃຈໃນສິ່ງທີ່ເຮົາເຮັດສຳເລັດໃນຕົວເຈົ້າ. ຈົ່ງຕື່ມເຕັມຊີວິດຂອງເຈົ້າດ້ວຍພຣະທຳຂອງເຮົາ, ຕື່ມເຕັມຄຳເວົ້າຂອງເຈົ້າດ້ວຍພະລັງຂອງເຮົາ ແລະ ນີ້ຄືສິ່ງທີ່ເຮົາຮຽກຮ້ອງຈາກເຈົ້າ. ການເຮັດຕາມຄວາມປາດຖະໜາຂອງເຈົ້າເອງນັ້ນ ມັນໄດ້ເປີດເຜີຍພາບລັກຂອງເຮົາຢູ່ບໍ? ນັ້ນຈະເປັນສິ່ງທີ່ພໍໃຈເຮົາຢູ່ບໍ? ເຈົ້າແມ່ນຄົນທີ່ໄດ້ສັງເກດຄວາມຕັ້ງໃຈຂອງເຮົາຢ່າງຈິງໃຈຢູ່ບໍ່? ເຈົ້າແມ່ນຄົນທີ່ພະຍາຍາມເຂົ້າໃຈຫົວໃຈຂອງເຮົາແທ້ບໍ່? ແທ້ຈິງແລ້ວ ເຈົ້າໄດ້ຖວາຍຕົວເຈົ້າເອງໃຫ້ເຮົາແລ້ວບໍ່? ເຈົ້າໄດ້ເສຍສະຫຼະຕົວເຈົ້າເພື່ອເຮົາແທ້ບໍ? ເຈົ້າໄດ້ໄຕ່ຕອງພຣະທຳຂອງເຮົາແລ້ວບໍ?

ຄົນຕ້ອງໃຊ້ສະຕິປັນຍາໃນທຸກດ້ານ ແລະ ໃຊ້ສະຕິປັນຍາເດີນຕາມເສັ້ນທາງອັນສົມບູນແບບຂອງເຮົາ. ບັນດາຜູ້ທີ່ເຮັດຕາມພຣະທຳຂອງເຮົາແມ່ນຄົນທີ່ສະຫຼາດທີ່ສຸດ ແລະ ບັນດາຜູ້ທີ່ປະພຶດຕົນໃຫ້ສອດຄ່ອງກັບພຣະທຳຂອງເຮົານັ້ນແມ່ນຜູ້ທີ່ເຊື່ອຟັງເຮົາຫຼາຍທີ່ສຸດ. ເຮົາເວົ້າແນວໃດກໍ່ຕ້ອງເປັນແນວນັ້ນ, ເຈົ້າບໍ່ຈຳເປັນຕ້ອງໂຕ້ຖຽງກັບເຮົາ ຫຼື ພະຍາຍາມໃຫ້ເຫດຜົນກັບເຮົາ. ທຸກສິ່ງທີ່ເຮົາກ່າວເຮົາກ່າວກັບເຈົ້າຢູ່ໃນໃຈ (ບໍ່ວ່າເຮົາຈະເຂັ້ມງວດ ຫຼື ອ່ອນໂຍນກໍຕາມ). ຖ້າເຈົ້າສຸມໃສ່ໃນການເຊື່ອຟັງກໍ່ຖືວ່າເປັນການດີ ແລະ ນີ້ແມ່ນເສັ້ນທາງແຫ່ງສະຕິປັນຍາອັນແທ້ຈິງ (ແລະ ເປັນການປ້ອງກັນບໍ່ໃຫ້ການພິພາກສາຂອງພຣະເຈົ້າເກີດຂຶ້ນກັບເຈົ້າ). ມື້ນີ້ຢູ່ເຮືອນຂອງເຮົາບໍ່ຕ້ອງເປັນຄົນສຸພາບຕໍ່ໜ້າເຮົາແລ້ວເວົ້າສິ່ງຕ່າງໆລັບຫຼັງເຮົາ. ເຮົາຕ້ອງການໃຫ້ເຈົ້າມີຄວາມເປັນຈິງ; ເຈົ້າບໍ່ຈຳເປັນຕ້ອງໃຊ້ສຳນວນໂວຫານ. ສຳລັບບັນດາຜູ້ທີ່ມີຄວາມເປັນຈິງຈະມີທຸກສິ່ງ, ສ່ວນບັນດາຜູ້ທີ່ບໍ່ມີຄວາມເປັນຈິງຈະບໍ່ມີຫຍັງເລີຍ. ແມ່ນແຕ່ຮ່າງກາຍຂອງພວກເຂົາກໍ່ຈະກັບໄປສູ່ຄວາມບໍ່ມີຕົວຕົນພ້ອມກັບພວກເຂົາ ເພາະວ່າຖ້າປາສະຈາກຄວາມເປັນຈິງແລ້ວ ກໍມີແຕ່ຄວາມວ່າງເປົ່າ; ບໍ່ມີຄຳອະທິບາຍອື່ນໃດອີກ.

ໃນຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າ ເຮົາຈະໃຫ້ພວກເຈົ້າຈິງໃຈ ແລະ ບໍ່ຄິດເຖິງສິ່ງທີ່ເຈົ້າອາດໄດ້ ຫຼື ເສຍ ຫຼື ບໍ່ແມ່ນສຳລັບທຸກສິ່ງທີ່ເຈົ້າມີ; ເຈົ້າຄວນສະແຫວງຫາເພື່ອເດີນຕາມເສັ້ນທາງທີ່ແທ້ຈິງເທົ່ານັ້ນ ແລະ ບໍ່ຖືກຄອບງຳ ຫຼື ຄວບຄຸມໂດຍຜູ້ໃດ. ນີ້ເປັນສິ່ງທີ່ຮູ້ກັນວ່າ ຜູ້ທີ່ເປັນເສົາຄ້ຳຂອງຄຣິດຕະຈັກ, ເປັນຜູ້ຊະນະແຫ່ງລາຊະອານາຈັກ ຕ້ອງໄດ້ປະຕິບັດຕາມ ບໍ່ດັ່ງນັ້ນກໍ່ໝາຍຄວາມວ່າ ເຈົ້າບໍ່ສົມຄວນທີ່ຈະມີຊີວິດຢູ່ຕໍ່ໜ້າເຮົາໄດ້.

ໃນສະຖານະການຕ່າງໆນັ້ນ, ວິທີການທີ່ຈະເຂົ້າໃກ້ເຮົາອາດແຕກຕ່າງກັນພໍສົມຄວນ. ບາງຄົນມັກເວົ້າຄຳເວົ້າທີ່ສວຍງາມ ແລະ ສະແດງຄວາມເຄົາລົບຕໍ່ໜ້າເຮົາ. ແນວໃດກໍ່ຕາມ, ລັບຫຼັງ ພວກເຂົາ

ແມ່ນໂກລະຫິນໄປໝົດ ແລະ ພຣະທຳຂອງເຮົາບໍ່ຄ່ອຍມີຢູ່ໃນພວກເຂົາເລີຍ. ພວກເຂົາໜ້າລັງກຽດ ແລະ ໜ້າລຳຄານທີ່ສຸດ; ມັນເປັນໄປບໍ່ໄດ້ທີ່ພວກເຂົາຈະສາມາດແນະຄົນອື່ນ ຫຼື ສະໜອງໃຫ້ກັບຜູ້ໃດໜຶ່ງໄດ້. ພວກເຈົ້າບໍ່ສາມາດທີ່ຈະຄຳນຶງເຖິງຫົວໃຈຂອງເຮົາໄດ້ ນັ້ນກໍ່ຍ້ອນວ່າພວກເຈົ້າບໍ່ສາມາດມີຄວາມໃກ້ຊິດ ຫຼື ສົນທະນາກັບເຮົາຫຼາຍຂຶ້ນ; ພວກເຈົ້າເຮັດໃຫ້ເຮົາກັງວົນກັບພວກເຈົ້າຢູ່ຕະຫຼອດ ແລະ ເຮັດວຽກເພື່ອພວກເຈົ້າຢູ່ຕະຫຼອດ.

# ບົດທີ 50

ຄຣິສຕະຈັກທັງໝົດ ແລະ ໄພ່ພົນທັງໝົດຄວນຄິດເຖິງອະດີດພ້ອມທັງເບິ່ງອະນາຄົດ: ການກະທຳໃນອະດີດຂອງພວກເຈົ້າ ມີຈັກຢ່າງທີ່ມີຄຸນສົມບັດ ແລະ ມີຈັກຢ່າງທີ່ມີສ່ວນຮ່ວມໃນການສ້າງອານາຈັກ? ຢ່າຄິດວ່າຕົນເອງສະຫຼາດ! ເຈົ້າຄວນເຫັນຂໍ້ບົກຜ່ອງຂອງຕົວເຈົ້າເອງຢ່າງຊັດເຈນ ແລະເຈົ້າຄວນເຂົ້າໃຈສະພາບການຕ່າງໆເຈົ້າເອງ. ເຮົາຮູ້ວ່າບໍ່ມີໃຜໃນບັນດາພວກເຈົ້າທີ່ເຕັມໃຈທີ່ຈະໃຊ້ຄວາມພະຍາຍາມໃດໆ ແລະ ເສຍສະຫຼະເວລາໃດໜຶ່ງໃນເລື່ອງນີ້, ດັ່ງນັ້ນ ເຈົ້າຈຶ່ງບໍ່ສາມາດບັນລຸຜົນສຳເລັດໃດໆ. ພວກເຈົ້າຢູ່ລ້າໆໂດຍບໍ່ໄດ້ເຮັດຫຍັງ, ເວລາທັງໝົດຂອງພວກເຈົ້າແມ່ນການກິນ, ການດື່ມ ແລະ ມີຄວາມມ່ວນຊື່ນ. ເມື່ອສອງສາມຄົນໃນພວກເຈົ້າເຕົ້າໂຮມກັນເພື່ອສ້າງສັນ ໂດຍບໍ່ໄດ້ໃສ່ໃຈເຖິງການໂອ້ລົມກັນກ່ຽວກັບເລື່ອງຝ່າຍວິນຍານໃນຊີວິດ ຫຼື ການມອບຊີວິດໃຫ້ແກ່ກັນແລະກັນ. ເຮົາທົນບໍ່ໄດ້ທີ່ຈະເຫັນພວກເຈົ້າເວົ້າຕະຫຼົກ ແລະ ຫົວຂວັນ ແລະ ເຖິງຢ່າງນັ້ນ ພວກເຈົ້າກໍ່ຍັງໄຮ້ສາລະຢູ່. ເຮົາໄດ້ກ່າວຫຼາຍເທື່ອແລ້ວ, ແຕ່ພວກເຈົ້າພຽງບໍ່ຮູ້ຈັກຄວາມໝາຍຂອງສິ່ງທີ່ເຮົາກ່າວ, ນີ້ບໍ່ແມ່ນບາງສິ່ງທີ່ເຫັນໄດ້ຊັດເຈນຢູ່ປາຍດັງຂອງພວກເຈົ້າບໍ? ເຮົາໄດ້ກ່າວສິ່ງຕ່າງໆແບບນີ້ກ່ອນໜ້ານີ້ແຕ່ພວກເຈົ້າຍັງບໍ່ທັນເຊື່ອໝັ້ນ ແລະ ພວກເຈົ້າບໍ່ຮັບຮູ້ສິ່ງທີ່ເຮົາກ່າວ, ຄິດວ່າເຮົາເຂົ້າໃຈພວກເຈົ້າຜິດ, ຄິດວ່າສິ່ງທີ່ເຮົາກ່າວນັ້ນບໍ່ເປັນຈິງ. ຫຼື ນັ້ນອາດຈະບໍ່ຖືກຕ້ອງບໍ?

ຖ້າເຈົ້າທຳທ່າປະຕິບັດກັບເຮົາ, ແລ້ວເຮົາກໍ່ຈະວາງເຈົ້າໄວ້ອີກຟາກໜຶ່ງ. ພຽງແຕ່ເຈົ້າກ້າທີ່ຈະເຮັດພໍເປັນພິທີອີກຄັ້ງ! ພຽງແຕ່ເຈົ້າກ້າທີ່ຈະເປັນຄົນໄຮ້ຄວາມຄິດ ແລະ ປະໝາດອີກຄັ້ງ! ພຣະທຳຂອງເຮົາແມ່ນມີດແກະສະຫຼັກ; ສິ່ງໃດກໍ່ຕາມທີ່ບໍ່ສອດຄ່ອງກັບຄວາມປະສົງຂອງເຮົາຈະຖືກຕັດອອກດ້ວຍມີດນີ້ ແລະ ເຈົ້າບໍ່ຈຳເປັນຕ້ອງພິຈາລະນາຫຼາຍເກີນໄປສຳລັບການໃຫ້ກຽດຕົວເຈົ້າເອງ. ເຮົາແກະສະຫຼັກເຈົ້າ ເພື່ອວ່າເຈົ້າຈະສາມາດເປັນຮູບເປັນຮ່າງ ແລະ ສອດຄ່ອງກັບຄວາມປະສົງຂອງເຮົາ. ຢ່າເຂົ້າໃຈຫົວໃຈຂອງເຮົາຜິດ; ພຽງແຕ່ຖ້າເຈົ້າຄຳນຶງເຖິງຫົວໃຈຂອງເຮົາໃຫ້ຫຼາຍທີ່ສຸດ, ມັນກໍສາມາດຍອມຮັບໄດ້. ຖ້າເຈົ້າສະແດງໃຫ້ເຫັນເຖິງການພິຈາລະນາແມ່ນແຕ່ໜ້ອຍດຽວ, ເຮົາກໍ່ຈະບໍ່ຫັນຫຼັງໄປຈາກເຈົ້າໃນຍາມທີ່ຖືກດູຖູກ. ຢ່າເມີນເສີຍມັນແບບບໍ່ຄິດຢູ່ສະເໝີ; ທາງດຽວທີ່ຍອມຮັບໄດ້ຄືໃຫ້ເຈົ້າອະນຸຍາດໃຫ້ຄວາມປະສົງຂອງເຮົາຖືກດຳເນີນການໃນຕົວເຈົ້າຢ່າງສະໝ່ຳສະເໝີ.

ໄພ່ພົນຈຳນວນຫຼວງຫຼາຍທັງໝົດຢູ່ໃນຕຳແໜ່ງທີ່ແຕກຕ່າງກັນ, ດັ່ງນັ້ນ ແນ່ນອນວ່າພວກເຈົ້າທຸກຄົນມີໜ້າທີ່ທີ່ແຕກຕ່າງກັນ. ແຕ່ພວກເຈົ້າຄວນເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອເສຍສະຫຼະຕົນເອງໃຫ້ກັບເຮົາຢ່າງຈິງໃຈ ແລະ ໜ້າທີ່ຂອງເຈົ້າແມ່ນເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້. ພວກເຈົ້າຄວນຊື່ສັດໃນເລື່ອງນີ້ ແລະ ເຕັມໃຈຢ່າງຍິນດີ. ເຈົ້າຕ້ອງບໍ່ເປັນຄົນສອງຈິດສອງໃຈແທ້ໆ! ບໍ່ດັ່ງນັ້ນ, ການຕັດສິນຂອງເຮົາກໍ່ຈະຢູ່ກັບພວກເຈົ້າຕະຫຼອດໄປ, ເນື້ອໜັງ, ວິນຍານ ແລະ ຈິດວິນຍານຂອງພວກເຈົ້າຈະບໍ່ສາມາດທົນມັນໄດ້ ແລະ ສຳລັບເຈົ້າແມ່ນຈະມີການຮ້ອງໄຫ້ ແລະ ການກັດແຂ້ວ.

# ບົດທີ 51

ໂອ! ພຣະເຈົ້າອົງຊົງລິດທານຸພາບສູງສຸດ! ອາແມນ! ດ້ວຍພຣະອົງ ທຸກສິ່ງຖືກປົດປ່ອຍ, ທຸກສິ່ງເປັນອິດສະຫຼະ, ທຸກສິ່ງຖືກເປີດອອກ, ທຸກສິ່ງຖືກເປີດເຜີຍ, ທຸກສິ່ງສະຫວ່າງສົດໃສ, ປາສະຈາກການປົກປິດ ຫຼື ການເຊື່ອງຊ້ອນໃດໆ. ພຣະອົງແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດຜູ້ບັງເກີດເປັນມະນຸດ. ພຣະອົງຊົງຄອງລາດດັ່ງກະສັດ. ພຣະອົງໄດ້ເປີດເຜີຍຢ່າງກວ້າງຂວາງ, ພຣະອົງບໍ່ມີຄວາມເລິກລັບອີກຕໍ່ໄປ ແຕ່ພຣະອົງຖືກເປີດເຜີຍຢ່າງສົມບູນເປັນນິລັນ! ເຮົາໄດ້ຖືກເປີດເຜີຍຢ່າງແທ້ຈິງທັງໝົດ, ເຮົາໄດ້ມາຮອດຢ່າງເປີດເຜີຍ ແລະ ເຮົາໄດ້ປາກົດຕົວດັ່ງດວງອາທິດແຫ່ງຄວາມຊອບທຳ ຍ້ອນວ່າ ມື້ນີ້ບໍ່ແມ່ນຍຸກແຫ່ງການປາກົດຕົວຂອງດາວເຜີດອີກຕໍ່ໄປ, ມັນບໍ່ແມ່ນໄລຍະເວລາແຫ່ງການປິດບັງອີກຕໍ່ໄປ. ພາລະກິດຂອງເຮົານັ້ນຄືດັ່ງສາຍຟ້າແມບເຫຼື້ອມ; ມັນສຳເລັດລົງຢ່າງໄວຄືກັບສຽງຟ້າຮ້ອງ. ພາລະກິດຂອງເຮົາໄດ້ກ້າວໜ້າມາຮອດຂັ້ນຕອນນີ້ ແລະ ໃຜກໍ່ຕາມທີ່ຊັກຊ້າ ຫຼື ຂີ້ຄ້ານຈະພົບແຕ່ກັບການພິພາກສາຢ່າງໄຮ້ຄວາມປານີ. ເຈົ້າຕ້ອງເຂົ້າໃຈຢ່າງຈະແຈ້ງເປັນພິເສດວ່າ ເຮົາແມ່ນຄວາມສະຫງ່າງາມ ແລະ ການພິພາກສາ ແລະ ເຮົາບໍ່ແມ່ນຄວາມກະລຸນາ ແລະ ຄວາມຮັກແບບທີ່ພວກເຈົ້າຈິນຕະນາການອີກຕໍ່ໄປ. ຖ້າເຈົ້າຍັງບໍ່ຊັດເຈນໃນຈຸດນີ້ ສິ່ງທີ່ເຈົ້າຈະໄດ້ຮັບກໍ່ຄືການພິພາກສາ ຍ້ອນວ່າເຈົ້າເອງຈະໄດ້ຊີມລົດຊາດທີ່ເຈົ້າບໍ່ເຄີຍຮັບຮູ້ມາກ່ອນ, ບໍ່ດັ່ງນັ້ນ ເຈົ້າກໍຈະຍັງມີຄວາມສົງໄສຢູ່ ແລະບໍ່ກ້າທີ່ຈະຍຶດໝັ້ນໃນຄວາມເຊື່ອຂອງເຈົ້າໄດ້.

ສິ່ງທີ່ເຮົາມອບໝາຍໃຫ້ພວກເຈົ້າ, ພວກເຈົ້າສາມາດເຮັດມັນໃຫ້ສຳເລັດດ້ວຍການອຸທິດໄດ້ບໍ? ເຮົາເວົ້າວ່າ ມັນຕ້ອງໃຊ້ສະຕິປັນຍາໃນການເຮັດສິ່ງໃດໜຶ່ງ, ແຕ່ວ່າມີສິ່ງໃດແດ່ທີ່ພວກເຈົ້າໄດ້ເຮັດຕາມຄຳແນະນຳຂອງເຮົາເທື່ອແລ້ວເທື່ອເລົ່າ ແລະ ໄດ້ພິຈາລະນາສິ່ງນັ້ນຕໍ່ໄປ? ເຖິງແມ່ນວ່າເຈົ້າມີຄວາມເຂົ້າໃຈຄຳດຽວກ່ຽວກັບຄຳແນະນຳຂອງເຮົາ ແລະ ເຈົ້າຄິດວ່າມັນດີເມື່ອເຈົ້າໄດ້ຍິນມັນ, ແຕ່ໃນເວລາຕໍ່ມາເຈົ້າກໍບໍ່ສົນໃຈມັນເລີຍ. ເມື່ອເຈົ້າໄດ້ຍິນມັນ, ເຈົ້າກໍນຳມັນໄປໃຊ້ກັບສະພາບຕົວຈິງຂອງເຈົ້າເອງ ແລະ ດູຖູກຕົວເອງ. ແຕ່ຕໍ່ມາ ເຈົ້າກໍເຊື່ອວ່າມັນເປັນເລື່ອງບໍ່ສຳຄັນ. ຄຳຖາມໃນມື້ນີ້ກໍຄືຊີວິດຂອງເຈົ້າສາມາດກ້າວໜ້າໄດ້ ຫຼື ບໍ່; ບໍ່ແມ່ນຄຳຖາມກ່ຽວກັບວ່າເຈົ້າຈະຕົກແຕ່ງພາຍນອກແນວໃດ. ບໍ່ມີໃຜໃນພວກເຈົ້າທີ່ມີຄວາມເດັດດ່ຽວ ແລະ ພວກເຈົ້າກໍບໍ່ເຕັມໃຈທີ່ຈະມີຄວາມມຸ່ງໝັ້ນ, ເຈົ້າບໍ່ຢາກຈ່າຍລາຄາ, ເຈົ້າບໍ່ຢາກປະຖິ້ມຄວາມສຸກຊົ່ວຄາວທາງໂລກ ແຕ່ເຈົ້າຢ້ານການສູນເສຍພອນຈາກສະຫວັນ. ເຈົ້າແມ່ນຄົນປະເພດໃດ? ເຈົ້າແມ່ນຄົນໂງ່! ພວກເຈົ້າຢ່າໄດ້ຄຽດແຄ້ນໃຈໄປເລີຍ, ແລ້ວສິ່ງທີ່ເຮົາກ່າວບໍ່ແມ່ນຄວາມຈິງບໍ? ມັນບໍ່ໄດ້ຊີ້ໃຫ້ເຫັນສິ່ງທີ່ເຈົ້າຄິດກ່ຽວກັບຕົວເຈົ້າເອງບໍ? ເຈົ້າບໍ່ມີຄວາມເປັນມະນຸດ! ເຈົ້າບໍ່ມີແມ່ນແຕ່ຄຸນນະພາບຂອງຄົນທຳມະດາ. ຍິ່ງໄປກວ່ານັ້ນ, ເຖິງແມ່ນວ່ານີ້ຄືຄວາມຈິງ ແຕ່ເຈົ້າກໍຍັງບໍ່ເຫັນຄວາມຂາດເຂີນຂອງຕົນເອງເລີຍ, ເຈົ້າສະບາຍ ແລະ ໄຮ້ຄວາມກັງວົນຢູ່ຕະຫຼອດເວລາ, ພໍໃຈໃນຕົວເອງ! ເຈົ້າບໍ່ຮູ້ວ່າຄວາມບົກຜ່ອງຂອງເຈົ້ານັ້ນໃຫຍ່ຫຼວງພຽງໃດ ຫຼື ມີຫຍັງແດ່ທີ່ເຈົ້າຂາດເຂີນ. ຈັ່ງແມ່ນໂງ່ແທ້!

ເຈົ້າບໍ່ເຫັນບໍວ່າພາລະກິດຂອງເຮົາໄດ້ມາເຖິງຈຸດດັ່ງກ່າວແລ້ວ? ຄວາມປະສົງທັງໝົດຂອງເຮົາຢູ່ໃນພວກເຈົ້າ, ເມື່ອໃດພວກເຈົ້າຈຶ່ງຈະເຂົ້າໃຈ ແລະ ພິຈາລະນາມັນ? ຂີ້ຄ້ານແທ້! ເຈົ້າບໍ່ເຕັມໃຈທີ່ຈະຈ່າຍລາຄາ, ບໍ່ເຕັມໃຈທີ່ຈະເຮັດວຽກໜັກ, ບໍ່ເຕັມໃຈທີ່ຈະໃຊ້ເວລາ ແລະ ບໍ່ເຕັມໃຈທີ່ຈະພະຍາຍາມ. ເຮົາຂໍບອກເຈົ້າ! ຍິ່ງເຈົ້າຢ້ານທົນທຸກກັບຄວາມຍາກລຳບາກຫຼາຍເທົ່າໃດ ຊີວິດຂອງເຈົ້າກໍຍິ່ງໄດ້ຮັບຜົນປະໂຫຍດໜ້ອຍລົງເທົ່ານັ້ນ, ຍິ່ງໄປກວ່ານັ້ນ ເມື່ອຊີວິດເຈົ້າເຕີບໃຫຍ່ຂຶ້ນ ເຈົ້າກໍຈະພົບກັບອຸປະສັກຕ່າງໆຫຼາຍຂຶ້ນ ແລະ ຈະບໍ່ມີຄວາມກ້າວໜ້າໃດໆເລີຍ. ເຮົາຂໍເຕືອນເຈົ້າອີກຄັ້ງໜຶ່ງ (ເຮົາຈະບໍ່ກ່າວມັນອີກ)! ໃຜກໍ່ຕາມທີ່ບໍ່ຮັບຜິດຊອບຊີວິດຂອງຕົນ ເຮົາຈະບໍ່ສົນໃຈ ແລະ ຈະປະຖິ້ມຜູ້ນັ້ນ. ເຮົາໄດ້ເລີ່ມບັງຄັບໃຊ້ສິ່ງນີ້ແລ້ວ; ເຈົ້າບໍ່ໄດ້ເຫັນສິ່ງນີ້ຢ່າງຊັດເຈນບໍ? ນີ້ບໍ່ແມ່ນການດຳເນີນທຸລະກິດ ແລະ ກໍບໍ່ແມ່ນການຄ້າ, ແຕ່ນີ້ແມ່ນຊີວິດ, ຊັດເຈນແລ້ວບໍ?

# ບົດທີ 52

ເຮົາປາກົດອອກມາເປັນດວງອາທິດແຫ່ງຄວາມຊອບທຳ, ພວກເຈົ້າ ແລະ ເຮົາຈະແບ່ງປັນສະຫງ່າລາສີ ແລະ ພອນທີ່ດີຮ່ວມກັນຕະລອດເປັນນິດ! ສິ່ງນີ້ແມ່ນຄວາມຈິງທີ່ບໍ່ສາມາດໂຕ້ຖຽງໄດ້ ແລະ ມັນໄດ້ເລີ່ມຖືກຢືນຢັນໃນຕົວພວກເຈົ້າແລ້ວ. ນີ້ກໍ່ຍ້ອນວ່າ ທຸກສິ່ງທີ່ເຮົາໄດ້ສັນຍາໄວ້ ເຮົາຈະເຮັດໃຫ້ມັນເປັນຈິງໃນຕົວພວກເຈົ້າ; ທຸກສິ່ງທີ່ເຮົາກ່າວນັ້ນຄືຄວາມເປັນຈິງ ແລະ ຈະບໍ່ມີວັນກັບມາຫາເຮົາໂດຍບໍ່ໄດ້ຮັບຜົນຫຍັງ. ພອນທີ່ດີເຫຼົ່ານີ້ມີໄວ້ສຳລັບພວກເຈົ້າ ແລະ ບໍ່ມີໃຜສາມາດອ້າງສິດໄດ້; ພວກມັນແມ່ນໝາກຜົນແຫ່ງການຮັບໃຊ້ຂອງພວກເຈົ້າທີ່ສອດຄ່ອງ ແລະ ເປັນເອກະພາບກັນກັບເຮົາ. ຈົ່ງປະຖິ້ມແນວຄວາມຄິດທາງສາສະໜາຂອງພວກເຈົ້າ; ຈົ່ງເຊື່ອໃນຄວາມຈິງແຫ່ງພຣະທຳຂອງເຮົາ ແລະ ບໍ່ຕ້ອງສົງໄສຫຍັງ! ເຮົາບໍ່ໄດ້ເວົ້າຫຼິ້ນກັບພວກເຈົ້າ; ເຮົາຈິງຈັງໃນສິ່ງທີ່ເຮົາກ່າວ. ບັນດາຜູ້ທີ່ເຮົາປະທານພອນໃຫ້ກໍ່ຈະໄດ້ຮັບພອນນັ້ນ; ສ່ວນບັນດາຜູ້ທີ່ເຮົາບໍ່ປະທານພອນໃຫ້ກໍ່ຈະບໍ່ໄດ້ຮັບພອນໃດໆ. ສິ່ງທັງໝົດນີ້ລ້ວນແລ້ວແຕ່ແມ່ນເຮົາເປັນຜູ້ກຳນົດ. ຄວາມໂຊກດີທາງໂລກແມ່ນສຳຄັນຫຍັງ! ໃນມຸມມອງຂອງເຮົາແມ່ນບໍ່ມີຫຍັງ ນອກຈາກຂີ້ສັດທີ່ມີຄ່າບໍ່ຮອດເງິນໜຶ່ງເຜັນນີ. ເພາະສະນັ້ນ ຈົ່ງບໍ່ຄວນເຫັນຄຸນຄ່າຂອງຄວາມສຸກທາງໂລກຫຼາຍເກີນໄປ; ການຊື່ນຊົມພອນຈາກສະຫວັນຮ່ວມກັບເຮົາບໍ່ແມ່ນສິ່ງທີ່ມີຄວາມໝາຍກວ່າ ແລະ ມີຄຸນຄ່າຫຼາຍກວ່າບໍ?

ກ່ອນໜ້ານີ້ ຄວາມຈິງບໍ່ໄດ້ຖືກເປີດເຜີຍ ແລະ ເຮົາກໍບໍ່ໄດ້ປາກົດຢ່າງເປີດເຜີຍ; ໃນຕອນນັ້ນພວກເຈົ້າຈຶ່ງສົງໄສເຮົາ ແລະ ບໍ່ກ້າທີ່ຈະຮູ້ສຶກໝັ້ນໃຈໃນຕົວເຮົາ. ແນວໃດກໍ່ຕາມ, ປັດຈຸບັນນີ້ ທຸກສິ່ງໄດ້ຖືກເປີດເຜີຍແລ້ວ ແລະ ເຮົາໄດ້ປາກົດອອກມາເປັນດວງອາທິດແຫ່ງຄວາມຊອບທຳ; ແລ້ວຖ້າພວກເຈົ້າຍັງສົງໄສຢູ່, ແລ້ວມີຫຍັງອີກທີ່ຕ້ອງກ່າວເພີ່ມເຕີມ? ເມື່ອຄວາມມືດປົກຄຸມແຜ່ນດິນໂລກມັນສາມາດໃຫ້ອະໄພໄດ້ທີ່ພວກເຈົ້າບໍ່ສາມາດເຫັນຄວາມສະຫວ່າງ, ແຕ່ປັດຈຸບັນນີ້ ດວງອາທິດໄດ້ເຍືອງແສງສະຫວ່າງໄປທົ່ວທຸກມຸມຂອງຄວາມມືດແລ້ວ; ສິ່ງທີ່ຖືກເຊື່ອງຊ້ອນຈະບໍ່ຖືກເຊື່ອງຊ້ອນອີກຕໍ່ໄປ ແລະ ສິ່ງທີ່ຖືກປິດບັງຈະບໍ່ຖືກປິດບັງອີກຕໍ່ໄປ; ຖ້າຫາກພວກເຈົ້າຍັງສົງໄສຢູ່ ເຮົາກໍ່ຈະບໍ່ຍົກໂທດໃຫ້ພວກເຈົ້າຢ່າງງ່າຍດາຍ! ບັດນີ້ ເຖິງເວລາທີ່ຈະຕ້ອງໝັ້ນໃຈຢ່າງແທ້ຈິງໃນຕົວເຮົາແລ້ວ, ເຖິງເວລາທີ່ຈະເຕັມໃຈອຸທິດຕົນເອງໃຫ້ແກ່ເຮົາ ແລະ ເສຍສະຫຼະເພື່ອເຮົາ. ໃຜກໍ່ຕາມທີ່ຕໍ່ຕ້ານເຮົາແມ່ນແຕ່ນ້ອຍດຽວ ກໍ່ຈະຖືກໄຟແຫ່ງການພິພາກສາເຜົາໄໝ້ທັນທີໂດຍບໍ່ມີການພິຈາລະນາໃດໆ ຫຼື ບໍ່ມີການຊັກຊ້າແມ່ນແຕ່ໜ້ອຍດຽວ ເພາະວ່າ ຕອນນີ້ແມ່ນເວລາເຊິ່ງການພິພາກສາທີ່ໄຮ້ຄວາມປານີໄດ້ມາຮອດແລ້ວ ແລະ ບັນດາຜູ້ທີ່ມີຈິດໃຈ ແລະ ຫົວໃຈທີ່ບໍ່ຖືກຕ້ອງຈະຖືກພິພາກສາທັນທີ. ນີ້ຄືຄວາມໝາຍທີ່ແທ້ຈິງຂອງຄຳວ່າ "ພາລະກິດຂອງເຮົານັ້ນຄືດັ່ງສາຍຟ້າແມບເຫຼື້ອມ" ດັ່ງທີ່ໄດ້ກ່າວມາ.

ມັນກ້າວໜ້າໂດຍໄວ, ມັນເຮັດໃຫ້ຄົນແປກໃຈ, ມັນເຮັດໃຫ້ຄົນຮູ້ສຶກຢ້ານ, ມັນຈະບໍ່ຊັກຊ້າອີກຕໍ່ໄປ ແລະ ບໍ່ສາມາດຢຸດໄດ້. ຍິ່ງພາລະກິດຂອງເຮົາຖືກດຳເນີນການຫຼາຍເທົ່າໃດ ມັນກໍ່ຍິ່ງກ້າວໄປຂ້າງໜ້າໄວເທົ່ານັ້ນ; ໃຜກໍ່ຕາມທີ່ບໍ່ລະມັດລະວັງ ແລະ ກຽມພ້ອມ ກໍຈະສ່ຽງຕໍ່ການຖືກປະຖິ້ມຢູ່

ສະເໜີ. ເຈົ້າບໍ່ສາມາດຍອມຈຳນົນຕໍ່ແຮງກະຕຸ້ນຂອງການລໍ້ລວງອີກຕໍ່ໄປ. ພາລະກິດຂອງເຮົາໄດ້ເລີ່ມຕົ້ນຢ່າງສົມບູນແລ້ວ ແລະ ກຳລັງຂະຫຍາຍໄປສູ່ຕ່າງຊາດທີ່ບໍ່ແມ່ນຊາວຍິວ ແລະ ທົ່ວໂລກຈັກກະວານ. ໄຟແຫ່ງການພິພາກສານັ້ນໄຮ້ຄວາມປານີ ແລະ ປາສະຈາກຄວາມເມດຕາ ຫຼື ຄວາມຮັກຕໍ່ຜູ້ໃດ. ບັນດາຜູ້ທີ່ຊື່ສັດພັກດີຕໍ່ພຣະເຈົ້າ ແຕ່ຍັງມີຄວາມຄິດ ແລະ ແນວຄວາມຄິດທີ່ບໍ່ຖືກຕ້ອງ ຫຼື ແມ່ນແຕ່ການຕໍ່ຕ້ານພຽງເລັກນ້ອຍກໍ່ຈະຖືກພິພາກສາເຊັ່ນກັນ; ນີ້ແມ່ນບໍ່ຕ້ອງສົງໄສເລີຍ. ໃຜກໍ່ຕາມທີ່ແສງສະຫວ່າງຂອງເຮົາສາດສ່ອງລົງໃສ່ ກໍຈະດຳລົງຢູ່ໃນຄວາມສະຫວ່າງນັ້ນ, ດຳເນີນຢູ່ໃນຄວາມສະຫວ່າງນັ້ນ ແລະ ຈະຮັບໃຊ້ເຮົາຈົນສຸດທົ້ນທາງ. ບັນດາຜູ້ທີ່ບໍ່ໄດ້ດຳລົງຢູ່ໃນຄວາມສະຫວ່າງ ແມ່ນຢູ່ໃນຄວາມມືດ. ເຮົາຈະຕັດສິນໃຈຫຼັງຈາກພິພາກສາພວກເຂົາອີງຕາມທັດສະນະຄະຕິຂອງພວກເຂົາທີ່ມີຕໍ່ຄວາມຜິດຂອງພວກເຂົາເອງ.

ວັນຂອງເຮົາໄດ້ມາຮອດແລ້ວ. “ວັນຂອງເຮົາ” ທີ່ເຮົາໄດ້ກ່າວເຖິງໃນອາດີດ ຕອນນີ້ຢູ່ຕໍ່ໜ້າຕໍ່ຕາເຈົ້າແລ້ວ, ຍ້ອນວ່າ ພວກເຈົ້າໄດ້ລົງມາພ້ອມກັບເຮົາ. ເຮົາຢູ່ກັບເຈົ້າ ແລະ ເຈົ້າຢູ່ກັບເຮົາ; ພວກເຮົາໄດ້ພົບກັນຢູ່ໃນອາກາດ ແລະ ແບ່ງປັນສະຫງ່າລາສີຮ່ວມກັນ. ວັນຂອງເຮົາໄດ້ມາຮອດຢ່າງແທ້ຈິງ!

# ບົດທີ 53

ເຮົາຄືການເລີ່ມຕົ້ນ ແລະ ເຮົາຄືຈຸດຈົບ. ເຮົາແມ່ນພຣະຜູ້ຟື້ນຄືນຊີບ ແລະ ເປັນພຣະເຈົ້າອົງທ່ຽງແທ້ຢ່າງສົມບູນ. ເຮົາກ່າວພຣະທຳຂອງເຮົາຕໍ່ໜ້າພວກເຈົ້າ ແລະ ພວກເຈົ້າຕ້ອງເຊື່ອໝັ້ນສິ່ງທີ່ເຮົາກ່າວຢ່າງໜັກແໜ້ນ. ສະຫວັນ ແລະ ແຜ່ນດິນໂລກອາດຈະຜ່ານພົ້ນໄປ ແຕ່ບໍ່ມີໜັງສືບົດໃດ ຫຼື ຂໍ້ຄວາມໃດທີ່ເຮົາກ່າວຈະຜ່ານພົ້ນໄປໄດ້. ຈົ່ງຈື່ຈຳສິ່ງນີ້ເອົາໄວ້! ຈົ່ງຈື່ຈຳມັນເອົາໄວ້! ເມື່ອເຮົາໄດ້ກ່າວມັນອອກມາແລ້ວ, ບໍ່ມີແມ່ນແຕ່ຄຳດຽວທີ່ເຄີຍຖືກນຳກັບມາ ແລະ ທຸກຄຳຈະເກີດເປັນຈິງ. ຕອນນີ້ເຖິງເວລາແລ້ວ ແລະ ພວກເຈົ້າຕ້ອງເຂົ້າໄປສູ່ຄວາມເປັນຈິງໂດຍໄວ. ບໍ່ມີເວລາເຫຼືອຫຼາຍແລ້ວ. ເຮົາຈະນຳບັນດາລູກຊາຍຂອງເຮົາໄປສູ່ອານາຈັກອັນສະຫງ່າລາສີ ແລະ ສິ່ງທີ່ພວກເຈົ້າສະແຫວງຫາ ແລະ ໂຫຍຫາຈະເກີດເປັນຈິງ. ລູກຊາຍຂອງເຮົາເອີຍ! ຈົ່ງລຸກຂຶ້ນໂດຍໄວ ແລະ ຕິດຕາມເຮົາມາ! ບໍ່ມີເວລາພຽງພໍໃຫ້ພວກເຈົ້າຄຸ່ນຄິດແລ້ວ. ເວລາທີ່ເສຍໄປຈະບໍ່ມີວັນກັບຄືນມາ; ຫຼັງຈາກຄວາມມືດຈະມີຄວາມສະຫວ່າງ ແລະ ການຍົກຂຶ້ນສູ່ສະຫວັນແມ່ນຢູ່ບ່ອນນີ້ຕໍ່ໜ້າຕໍ່ຕາພວກເຈົ້າແລ້ວ. ພວກເຈົ້າເຂົ້າໃຈບໍ? ຈົ່ງມືນຕາຂອງພວກເຈົ້າ! ຈົ່ງຕື່ນຂຶ້ນໄວໆ! ຕອນນີ້ ເຈົ້າບໍ່ໄດ້ຮັບອະນຸຍາດໃຫ້ສື່ສານກັນເອງໃນບັນດາພວກເຈົ້າເພື່ອລົມກັນຫຼິ້ນແບບບໍ່ມີຜົນປະໂຫຍດ ຫຼື ເວົ້າສິ່ງໃດທີ່ບໍ່ເປັນປະໂຫຍດແກ່ການສ້າງສາຄຣິດຕະຈັກ. ສິ່ງສຳຄັນຄືການມອບປະສົບການຕົວຈິງຂອງເຈົ້າໃຫ້ແກ່ບັນດາອ້າຍເອື້ອຍນ້ອງຂອງເຈົ້າ ຫຼື ອະທິບາຍວ່າເຈົ້າໄດ້ຮັບແສງເຍືອງທາງຢູ່ຕໍ່ໜ້າພຣະເຈົ້າ ແລະ ຮູ້ຈັກຕົວຕົນຂອງເຈົ້າເອງແນວໃດ. ໃຜກໍ່ຕາມທີ່ສາມາດຈັດຫາສິ່ງເຫຼົ່ານີ້ຈະມີວຸດທິພາວະ! ປັດຈຸບັນນີ້ ພວກເຈົ້າບາງຄົນຍັງບໍ່ຢ້ານ ແລະ ບໍ່ວ່າເຮົາກ່າວສິ່ງໃດ ຫຼື ກັງວົນຫຼາຍປານໃດກໍ່ຕາມ ເຈົ້າກໍ່ຍັງບໍ່ຢ້ານ; ຕົວຕົນເດີມຂອງເຈົ້າບໍ່ຍອມໃຫ້ຖືກສຳຜັດແມ່ນແຕ່ໜ້ອຍເລີຍ. ດີແລ້ວ, ສະນັ້ນຈົ່ງດຳເນີນຕໍ່ໄປແບບນັ້ນ! ຈົ່ງຖ້າເບິ່ງວ່າໃຜຈະຖືກທຳລາຍ! ເຈົ້າຄິດໃສ່ໃຈໃນທາງໂລກສະເໝີ, ສະແຫວງຫາຄວາມຮັ່ງມີ ແລະ ຮູ້ສຶກມີຄວາມຜູກພັນຢ່າງແຮງກ້າກັບລູກຊາຍ-ລູກສາວ ແລະ ຜົວຂອງເຈົ້າ. ດີແລ້ວ, ເຈົ້າສາມາດສືບຕໍ່ຮູ້ສຶກຜູກພັນໄປໂລດ! ບໍ່ແມ່ນວ່າພຣະທຳຂອງເຮົາບໍ່ໄດ້ກ່າວເຖິງພວກເຈົ້າ ແລະ ພວກເຈົ້າຈົ່ງເຮັດໄດ້ພຽງແຕ່ດຳເນີນຕໍ່ໄປຕາມທີ່ພວກເຈົ້າປາຖະໜາ! ໃນອະນາຄົນອັນໃກ້ນີ້ ພວກເຈົ້າຈະເຂົ້າໃຈທຸກສິ່ງ, ແຕ່ຕອນນັ້ນມັນກໍ່ຈະສາຍເກີນໄປແລ້ວ. ສິ່ງດຽວທີ່ລໍຖ້າພວກເຈົ້າຢູ່ກໍຄືການພິພາກສາ.

# ບົດທີ 54

ເຮົາຮູ້ຈັກສະຖານະການຂອງຄຣິສຕະຈັກແຕ່ລະແຫ່ງຄືກັບຫຼັງມືຂອງເຮົາ. ຢ່າຄິດວ່າເຮົາບໍ່ເຂົ້າໃຈ ຫຼື ບໍ່ມີຄວາມກະຈ່າງແຈ້ງກ່ຽວກັບສະຖານະການຕ່າງໆ. ເຮົາຍິ່ງເຂົ້າໃຈ ແລະ ຮູ້ຈັກຄົນຫຼາກຫຼາຍປະເພດທີ່ຢູ່ໃນຄຣິສຕະຈັກແຕ່ລະແຫ່ງຫຼາຍກວ່ານັ້ນ. ຕອນນີ້ ມັນແມ່ນຄວາມປະສົງອັນຮີບດ່ວນຂອງເຮົາທີ່ຕ້ອງຝຶກຝົນເຈົ້າ, ເພື່ອວ່າເຈົ້າຈະໄດ້ເຕີບໂຕເປັນຜູ້ໃຫຍ່ໂດຍໄວຍິ່ງຂຶ້ນ ແລະ ເພື່ອວ່າມື້ທີ່ເຈົ້າມີປະໂຫຍດຕໍ່ເຮົາຈະມາເຖິງໄວຂຶ້ນ; ເພື່ອການກະທຳຂອງພວກເຈົ້າຈະເຕັມໄປດ້ວຍສະຕິປັນຍາຂອງເຮົາ ແລະ ເພື່ອວ່າພວກເຈົ້າຈະສາມາດສຳແດງເຖິງພຣະເຈົ້າຢູ່ທຸກຫົນແຫ່ງທີ່ພວກເຈົ້າຢູ່. ດ້ວຍວິທີນີ້ ຈຸດປະສົງສູງສຸດຂອງເຮົາຈຶ່ງຈະຖືກບັນລຸ. ລູກຊາຍທັງຫຼາຍຂອງເຮົາເອີຍ! ພວກເຈົ້າຄວນຄຳນຶງເຖິງຄວາມປະສົງຂອງເຮົາ, ຢ່າເຮັດໃຫ້ເຮົາຈັບມືຂອງພວກເຈົ້າໃນເວລາທີ່ເຮົາສັ່ງສອນພວກເຈົ້າ. ພວກເຈົ້າຕ້ອງຮຽນຮູ້ທີ່ຈະເຂົ້າໃຈຄວາມປະສົງຂອງເຮົາ ແລະ ເຫັນເຖິງຫົວໃຈສຳຄັນຂອງເລື່ອງຕ່າງໆ. ສິ່ງນີ້ຈະເຮັດໃຫ້ພວກເຈົ້າສາມາດຈັດການກັບທຸກເລື່ອງລາວທີ່ພວກເຈົ້າຜະເຊີນຢ່າງງ່າຍດາຍ ຄືກັບການດີດນິ້ວ. ບາງເທື່ອໃນການຝຶກຝົນຂອງພວກເຈົ້າ, ທຳອິດ ພວກເຈົ້າອາດຈະບໍ່ສາມາດເຂົ້າໃຈໄດ້ ແຕ່ຫຼັງຈາກຄັ້ງທີສອງ, ຄັ້ງທີສາມ... ໃນທີ່ສຸດ ພວກເຈົ້າກໍຈະສາມາດເຂົ້າໃຈຄວາມປະສົງຂອງເຮົາ.

ຄຳເວົ້າຂອງພວກເຈົ້າແມ່ນມີຄຸນນະພາບທີ່ບໍ່ສາມາດເຈາະໄດ້. ພວກເຈົ້າເຊື່ອວ່ານີ້ແມ່ນສະຕິປັນຍາ, ແມ່ນບໍ? ບາງເທື່ອພວກເຈົ້າເວົ້າແບບບໍ່ເຊື່ອຟັງ, ບາງເທື່ອພວກເຈົ້າເວົ້າແບບລໍ້ຫຼິ້ນ ແລະ ບາງເທື່ອພວກເຈົ້າກໍເວົ້າອອກຈາກແນວຄວາມຄິດ ຫຼື ຈາກຄວາມອິດສາຂອງມະນຸດ... ສະຫຼຸບກໍຄືພວກເຈົ້າເວົ້າແບບບໍ່ໝັ້ນຄົງ ໂດຍບໍ່ຮູ້ວິທີສະໜອງຊີວິດໃຫ້ກັບຄົນອື່ນ ຫຼື ເຂົ້າໃຈເຖິງສະພາບການຂອງພວກເຂົາ ແຕ່ກັບສື່ສານຢ່າງບໍ່ໃສ່ໃຈ. ຄວາມຄິດຂອງພວກເຈົ້າບໍ່ຊັດເຈນ, ພວກເຈົ້າບໍ່ຮູ້ຈັກວ່າສະຕິປັນຍາແມ່ນຫຍັງ ແລະ ການຫຼອກລວງແມ່ນຫຍັງ. ພວກເຈົ້າຊ່າງສັບສົນແທ້ເດ! ພວກເຈົ້າຖືວ່າການຫຼອກລວງ ແລະ ການຄິດໂກງເປັນສະຕິປັນຍາ, ສິ່ງນີ້ບໍ່ໄດ້ນຳເອົາຄວາມອັບອາຍມາສູ່ນາມຂອງເຮົາບໍ? ສິ່ງນີ້ບໍ່ໄດ້ໝິ່ນປະໝາດເຮົາບໍ? ສິ່ງນີ້ບໍ່ໄດ້ນຳເອົາການກ່າວຫາແບບຜິດໆມາສູ່ເຮົາບໍ? ແລ້ວແມ່ນຫຍັງຄືເປົ້າໝາຍທີ່ເຈົ້າສະແຫວງຫາ? ພວກເຈົ້າຄິດກ່ຽວກັບສິ່ງນັ້ນຢ່າງຮອບຄອບບໍ? ພວກເຈົ້າໄດ້ດຳເນີນການສະແຫວງຫາໃນສິ່ງນີ້ຢູ່ບໍ? ເຮົາບອກກັບເຈົ້າວ່າ ຄວາມປະສົງຂອງເຮົາແມ່ນທິດທາງ ແລະ ເປົ້າໝາຍທີ່ພວກເຈົ້າສະແຫວງຫາ, ບໍ່ດັ່ງນັ້ນ ທຸກສິ່ງກໍຈະສູນເປົ່າ. ຄົນທີ່ບໍ່ຮູ້ຈັກຄວາມປະສົງຂອງເຮົາແມ່ນເປັນຄົນທີ່ບໍ່ຮູ້ຈັກວິທີສະແຫວງຫາ ແລະ ຈະຖືກປະຖິ້ມ, ຖືກໂຍນອອກ! ເຫັນໄດ້ຢ່າງຊັດເຈນວ່າ ການເຂົ້າໃຈຄວາມປະສົງຂອງເຮົາແມ່ນບົດຮຽນທຳອິດທີ່ພວກເຈົ້າຕ້ອງຮຽນຮູ້. ມັນເປັນວຽກງານທີ່ຮີບດ່ວນທີ່ສຸດ ແລະ ບໍ່ຄວນປ່ອຍໃຫ້ຊັກຊ້າ! ຢ່າລໍຖ້າໃຫ້ເຮົາປະນາມພວກເຈົ້າເທື່ອລະຄົນ! ພວກເຈົ້າໃຊ້ເວລາໝົດມື້ຢູ່ກັບສະພາບມຶດມົວ ແລະ ເຍັນຊາຢ່າງໂງ່ຈ້າຕະຫຼອດເວລາ. ມັນຊ່າງເປັນຕາຢາກຫົວແທ້ເດ! ຄວາມໂງ່ຈ້າຂອງພວກເຈົ້າແມ່ນໜ້າປະຫຼາດໃຈແທ້ໆ ແລະ ເຈົ້າບໍ່ສົນໃຈກ່ຽວກັບຄວາມປະສົງຂອງເຮົາເລີຍ! ຖາມຕົນເອງເບິ່ງວ່າ ມີຈັກເທື່ອທີ່ພວກເຈົ້າໄດ້ເຂົ້າໃຈຄວາມປະສົງຂອງເຮົາ

ແລະ ປະຕິບັດຕາມ? ບັດນີ້ ມັນເຖິງເວລາທີ່ພວກເຈົ້າຄວນຝຶກຝົນຕົນເອງ! ການໃຫ້ເຮົາຈັດການກັບພວກເຈົ້າເທື່ອລະຄົນນັ້ນມັນເປັນໄປບໍ່ໄດ້! ພວກເຈົ້າຄວນຮຽນຮູ້ເພື່ອຈະໄດ້ມີປະສົບການ ແລະ ເພື່ອຈະໄດ້ຮັບຄວາມຮູ້ ແລະ ສະຕິປັນຍາໃນຂະນະທີ່ພວກເຈົ້າກະທຳ. ຄຳເວົ້າທີ່ອອກມາຈາກປາກຂອງພວກເຈົ້າແມ່ນດີ, ແຕ່ແມ່ນຫຍັງຄືຄວາມເປັນຈິງ? ເມື່ອພວກເຈົ້າຜະເຊີນກັບຄວາມເປັນຈິງ, ພວກເຈົ້າຈະບໍ່ສາມາດເຮັດຫຍັງໄດ້ເລີຍ. ສິ່ງທີ່ພວກເຈົ້າເວົ້າແມ່ນບໍ່ເຄີຍສອດຄ່ອງກັບຄວາມເປັນຈິງ. ແທ້ຈິງແລ້ວ ເຮົາບໍ່ສາມາດທົນເຫັນສິ່ງທີ່ພວກເຈົ້າກຳລັງເຮັດ; ເມື່ອເວລາເຮົາຫຼຽວເບິ່ງ, ເຮົາຮູ້ສຶກເສົ້າໃຈທີ່ສຸດ. ໃຫ້ຈື່ສິ່ງນີ້ໄວ້! ໃນອະນາຄົດ ຈົ່ງຮຽນຮູ້ທີ່ຈະເຂົ້າໃຈຄວາມປະສົງຂອງເຮົາ!

# ບົດທີ 55

ຄວາມເປັນມະນຸດທຳມະດາທີ່ຖືກກ່າວເຖິງ ບໍ່ແມ່ນສິ່ງທີ່ເໜືອທຳມະຊາດຄືກັບທີ່ຜູ້ຄົນຈິນຕະນາການ. ກົງກັນຂ້າມ ມັນສາມາດຢູ່ເໜືອຂໍ້ຜູກມັດຂອງມະນຸດທຸກຄົນ, ທຸກເຫດການ ແລະ ທຸກສິ່ງ ແລະ ການຂົ່ມເຫັງທີ່ເກີດຂຶ້ນຈາກສະພາບແວດລ້ອມຂອງຜູ້ໃດໜຶ່ງ. ມັນ ສາມາດຫຍັບເຂົ້າໃກ້ເຮົາ ແລະ ລົມກັບເຮົາໃນສະຖານທີ່ ຫຼື ສະຖານະການໃດກໍຕາມ. ພວກເຈົ້າທີ່ເປັນມະນຸດຕີຄວາມໝາຍເຈດຕະນາຂອງເຮົາຢ່າງຜິດຢູ່ສະເໝີ. ເມື່ອເຮົາເວົ້າວ່າ ພວກເຈົ້າຄວນດຳລົງຊີວິດຕາມຄວາມເປັນມະນຸດທີ່ປົກກະຕິ, ພວກເຈົ້າກໍຫັກຫ້າມຕົນເອງ ແລະ ຄວບຄຸມເນື້ອໜັງຂອງພວກເຈົ້າ, ແຕ່ພວກເຈົ້າບໍ່ສົນໃຈໃນທີ່ຈະຄົ້ນຫາພາຍໃນວິນຍານຂອງເຈົ້າຢ່າງລະມັດລະວັງ. ເຈົ້າພຽງແຕ່ໃຫ້ຄວາມສຳຄັນກັບລັກສະນະພາຍນອກຂອງເຈົ້າ, ເບິ່ງຂ້າມການເປີດເຜີຍ ແລະ ການກະຕຸ້ນທີ່ເຮົາເຮັດໃຫ້ເກີດຂຶ້ນຢູ່ພາຍໃນເຈົ້າ. ເຈົ້າຊ່າງບໍ່ລະມັດລະວັງ! ບໍ່ລະມັດລະວັງຫຼາຍເກີນໄປ! ເປັນໄປໄດ້ບໍວ່າ ເຈົ້າຖືວ່າການສຳເລັດສິ່ງທີ່ເຮົາໄດ້ຝາກຝັງໃຫ້ແກ່ເຈົ້າເປັນຜົນສຳເລັດບາງຢ່າງທີ່ຍິ່ງໃຫຍ່? ເຈົ້າຊ່າງໂງ່ຈ້າ! ເຈົ້າບໍ່ສົນໃຈທີ່ຈະຢັ່ງຮາກລົງໃຫ້ເລິກໆ! "ຢ່າເປັນຄືກັບໃບໄມ້ທີ່ຢູ່ເທິງຕົ້ນໄມ້, ແຕ່ໃຫ້ເປັນຮາກຂອງຕົ້ນໄມ້" ນັ້ນຄືຄຳຂວັນຂອງເຈົ້າແທ້ໆບໍ? ຊ່າງບໍ່ມີຄວາມຄິດ! ຊ່າງບໍ່ລະມັດລະວັງ! ເຈົ້າພໍໃຈ ທັນທີທີ່ເຈົ້າຄິດວ່າ ເຈົ້າໄດ້ຮັບຜົນປະໂຫຍດທີ່ເລັກນ້ອຍ. ເຈົ້າສົນໃຈຄວາມປະສົງຂອງເຮົາພຽງແຕ່ໜ້ອຍດຽວ! ຕັ້ງແຕ່ນີ້ເປັນຕົ້ນໄປ ໃຫ້ລະມັດລະວັງ, ຢ່າຂີ້ຄ້ານ ແລະ ຢ່າຄິດລົບ! ໃນຂະນະທີ່ເຈົ້າຮັບໃຊ້, ໃຫ້ຫຍັບເຂົ້າໃກ້ເຮົາເລື້ອຍຂຶ້ນ ແລະ ສື່ສານກັບເຮົາຫຼາຍຂຶ້ນ: ນີ້ແມ່ນທາງອອກດຽວຂອງເຈົ້າ. ເຮົາຮູ້ວ່າເຈົ້າປະຕິເສດຕົນເອງແລ້ວ, ຮູ້ຈັກຂໍ້ບົກຜ່ອງຂອງເຈົ້າເອງ ແລະ ຮູ້ຈັກເຖິງຄວາມອ່ອນຂອງເຈົ້າເອງ. ເຖິງຢ່າງໃດກໍຕາມ ການຮູ້ຈັກຢ່າງດຽວແມ່ນຍັງບໍ່ພຽງພໍ. ເຈົ້າຕ້ອງຮ່ວມມືກັບເຮົາ ແລະ ຫຼັງຈາກທີ່ເຈົ້າເຂົ້າໃຈເຈດຕະນາຂອງເຮົາ ໃຫ້ນຳສິ່ງເຫຼົ່ານັ້ນເຂົ້າສູ່ການປະຕິບັດທັນທີ. ນີ້ແມ່ນວິທີທີ່ດີສຸດທີ່ຈະສະແດງຄວາມເປັນຫ່ວງຕໍ່ພາລະຂອງເຮົາ ພ້ອມທັງເປັນວິທີທີ່ດີທີ່ສຸດທີ່ຈະຍອມ.

ບໍ່ວ່າເຈົ້າຈະປະຕິບັດຕໍ່ເຮົາແນວໃດກໍຕາມ, ເຮົາປາຖະໜາທີ່ຈະປະຕິບັດຄວາມປະສົງຂອງເຮົາໃນຕົວເຈົ້າ ແລະ ໄພ່ພົນທັງໝົດ ແລະ ເຮົາຕ້ອງການໃຫ້ປະຕິບັດຄວາມປະສົງຂອງເຮົາທົ່ວດິນແດນທັງໝົດໂດຍບໍ່ມີຫຍັງຂັດຂວາງ. ໃຫ້ຕື່ນຕົວກ່ຽວກັບສິ່ງນີ້ຢ່າງສົມບູນ! ສິ່ງນີ້ກ່ຽວຂ້ອງກັບບົດບັນຍັດການບໍລິຫານຂອງເຮົາ! ເຈົ້າບໍ່ຢ້ານແມ່ນແຕ່ໜ້ອຍດຽວເລີຍບໍ? ເຈົ້າບໍ່ສັ່ນຢ້ານໃນການກະທຳ ແລະ ການປະພຶດຂອງເຈົ້າບໍ? ທ່າມກາງບັນດາໄພ່ພົນທັງປວງ ເກືອບບໍ່ມີໃຜສາມາດຮູ້ສຶກເຖິງເຈດຕະນາຂອງເຮົາໄດ້. ເຈົ້າບໍ່ປາຖະໜາທີ່ຈະໂດດເດັ່ນເປັນຄົນທີ່ເອົາໃຈໃສ່ຕໍ່ຄວາມປະສົງຂອງເຮົາຢ່າງແທ້ຈິງບໍ? ເຈົ້າຮູ້ບໍ? ເຈດຕະນາອັນຮີບດ່ວນຂອງເຮົາໃນປັດຈຸບັນຄືການສະແຫວງຫາກຸ່ມຄົນທີ່ສາມາດເອົາໃຈໃສ່ຕໍ່ຄວາມປະສົງຂອງເຮົາຢ່າງສົມບູນ. ເຈົ້າບໍ່ຕ້ອງການເປັນໜຶ່ງໃນຄົນເຫຼົ່ານັ້ນບໍ? ເຈົ້າບໍ່ຕ້ອງການເສຍສະຫຼະຕົນເອງເພື່ອເຫັນແກ່ເຮົາ ແລະ ຖວາຍຕົນເອງເພື່ອເຮົາບໍ? ເຈົ້າບໍ່ເຕັມໃຈທີ່ຈະຈ່າຍແມ່ນແຕ່ລາຄາທີ່ໜ້ອຍສຸດ ຫຼື ໃສ່ແມ່ນແຕ່ຄວາມພະຍາຍາມທີ່ເລັກນ້ອຍທີ່ສຸດ! ຖ້າມັນສືບຕໍ່ເປັນ

ແບບນັ້ນ, ຄວາມພະຍາຍາມອັນພາກພຽນຂອງເຮົາກໍຈະເສຍເປົ່າໃນພວກເຈົ້າ. ບັດນີ້ເມື່ອເຮົາໄດ້ຊີ້ໃຫ້ເຈົ້າເຫັນເຖິງສິ່ງນີ້, ເຈົ້າຍັງບໍ່ເຂົ້າໃຈຄວາມຈິງຈັງຂອງບັນຫານີ້ບໍ?

"ສຳລັບຄົນທີ່ເສຍສະຫຼະເພື່ອເຮົາຢ່າງຈິງໃຈ, ເຮົາຈະອວຍພອນເຈົ້າຢ່າງຫຼວງຫຼາຍແນ່ນອນ". ເຈົ້າເບິ່ງແມະ! ເຮົາໄດ້ບອກສິ່ງນີ້ກັບເຈົ້າຫຼາຍຄັ້ງ, ແຕ່ເຈົ້າຍັງມີຄວາມສົງໄສ ແລະ ຄວາມຢ້ານຫຼາຍຢ່າງທີ່ຈະເຮັດກັບສະຖານະການໃນຄອບຄົວຂອງເຈົ້າ ແລະ ສະພາບແວດລ້ອມພາຍນອກ. ເຈົ້າບໍ່ຮູ້ແທ້ໆວ່າແມ່ນຫຍັງດີສຳລັບເຈົ້າ! ເຮົາໃຊ້ພຽງແຕ່ຄົນທີ່ຊື່ສັດ, ທຳມະດາ ແລະ ເປີດເຜີຍ. ເຈົ້າມີຄວາມສຸກ ແລະ ເຕັມໃຈທີ່ຈະໃຫ້ເຮົາໃຊ້ເຈົ້າ, ແຕ່ເປັນຫຍັງເຈົ້າຈຶ່ງຍັງກັງວົນຫຼາຍ? ມັນເປັນໄປໄດ້ບໍວ່າ ພຣະທຳຂອງເຮົາບໍ່ມີຜົນຫຍັງຕໍ່ເຈົ້າເລີຍ? ເຮົາໄດ້ເວົ້າແລ້ວວ່າ ເຮົາກຳລັງໃຊ້ເຈົ້າ, ແຕ່ເຈົ້າບໍ່ສາມາດເຊື່ອໝັ້ນໃນສິ່ງນັ້ນຢ່າງແນວແນ່. ເຈົ້າສົງໄສຢູ່ສະເໝີ, ຢ້ານວ່າເຮົາຈະປະຖິ້ມເຈົ້າ. ແນວຄິດຂອງເຈົ້າຝັງແໜ້ນຫຼາຍ! ເມື່ອເຮົາເວົ້າວ່າ ເຮົາກຳລັງໃຊ້ເຈົ້າ, ນັ້ນກໍໝາຍຄວາມວ່າ ເຮົາກຳລັງໃຊ້ເຈົ້າ. ເປັນຫຍັງເຈົ້າຈຶ່ງສົງໄສຫຼາຍຢູ່ສະເໝີ? ເຮົາຍັງບໍ່ໄດ້ເວົ້າຢ່າງຊັດເຈນພໍບໍ? ທຸກຄຳທີ່ເຮົາເວົ້າເປັນຄວາມຈິງ; ບໍ່ມີພຣະຄຳແມ່ນແຕ່ໜຶ່ງຂໍ້ທີ່ບໍ່ເປັນຄວາມຈິງ. ລູກຊາຍຂອງເຮົາເອີຍ! ໃຫ້ເຊື່ອເຮົາ. ໃຫ້ອຸທິດແທນເຮົາ ແລະ ເຮົາຈະອຸທິດຕໍ່ເຈົ້າຢ່າງແນ່ນອນ!

# ບົດທີ 56

ເຮົາໄດ້ເລີ່ມຕົ້ນລົງມືປະຕິບັດເພື່ອລົງໂທດຄົນທີ່ເຮັດການຊົ່ວຮ້າຍ, ຄົນທີ່ມີອຳນາດ ແລະ ຄົນທີ່ຂົ່ມເຫັງລູກຊາຍຂອງພຣະເຈົ້າ. ຕັ້ງແຕ່ນີ້ເປັນຕົ້ນໄປ, ໃຜກໍຕາມທີ່ຂັດກັບເຮົາຢູ່ໃນຫົວໃຈຂອງພວກເຂົາ, ມີແຫ່ງພຣະດຳລັດຂອງເຮົາຈະມາເຖິງພວກເຂົາ. ໃຫ້ຮູ້ສິ່ງນີ້ໄວ້! ນີ້ແມ່ນການເລີ່ມຕົ້ນແຫ່ງການພິພາກສາຂອງເຮົາ ແລະ ຈະບໍ່ມີການສະແດງຄວາມເມດຕາຕໍ່ໃຜເລີຍ ແລະ ບໍ່ມີໃຜທີ່ຈະຖືກປ່ອຍໄປ ຍ້ອນເຮົາເປັນພຣະເຈົ້າທີ່ໄຮ້ຄວາມຮູ້ສຶກເຊິ່ງປະຕິບັດຄວາມຊອບທຳ; ມັນຈະດີສຳລັບພວກເຈົ້າທີ່ຈະຮັບຮູ້ສິ່ງນີ້.

ບໍ່ແມ່ນວ່າເຮົາຕ້ອງການລົງໂທດຄົນທີ່ເຮັດການຊົ່ວຮ້າຍ, ກົງກັນຂ້າມ ມັນຄືຜົນກຳສະໜອງທີ່ພວກເຂົານຳມາສູ່ຕົວເອງຍ້ອນການເຮັດຊົ່ວຂອງພວກເຂົາເອງ. ເຮົາບໍ່ໄດ້ລົງໂທດໃຜຢ່າງໄວ ແລະ ເຮົາບໍ່ປະຕິບັດຕໍ່ຄົນໃດຄົນໜຶ່ງຢ່າງບໍ່ຍຸຕິທຳ, ເຮົາຊອບທຳຕໍ່ທຸກຄົນ. ເຮົາຮັກລູກຊາຍຂອງເຮົາຢ່າງແນ່ນອນ ແລະ ເຮົາກໍກຽດຊັງຄົນຊົ່ວຮ້າຍເຫຼົ່ານັ້ນທີ່ທ້າທາຍເຮົາຢ່າງແນ່ນອນ; ນີ້ແມ່ນຫຼັກການທີ່ຢູ່ເບື້ອງຫຼັງການກະທຳຂອງເຮົາ. ພວກເຈົ້າແຕ່ລະຄົນຄວນມີຄວາມເຂົ້າໃຈໃນພຣະດຳລັດຂອງເຮົາ. ຖ້າບໍ່ດັ່ງນັ້ນ, ພວກເຈົ້າກໍຈະບໍ່ມີຄວາມຢຳເກງແມ່ນແຕ່ໜ້ອຍດຽວ ແລະ ຈະປະພຶດຕົນຢ່າງບໍ່ສົນໃຈເມື່ອຢູ່ຕໍ່ໜ້າເຮົາ. ເຈົ້າຈະບໍ່ຮູ້ສິ່ງທີ່ເຮົາຢາກບັນລຸເຊັ່ນກັນ, ເຮົາຕ້ອງການເຮັດຫຍັງໃຫ້ສຳເລັດ, ເຮົາຕ້ອງການຮັບເອົາຫຍັງ ຫຼື ອານາຈັກຂອງເຮົາຕ້ອງການຄົນປະເພດໃດ.

ພຣະດຳລັດຂອງເຮົາກໍຄື:

1. ບໍ່ວ່າເຈົ້າເປັນໃຜກໍຕາມ, ຖ້າເຈົ້າຂັດແຍ້ງເຮົາຢູ່ໃນຫົວໃຈຂອງເຈົ້າ, ເຈົ້າກໍຈະຖືກພິພາກສາ.
2. ບັນດາຄົນທີ່ເຮົາໄດ້ເລືອກຈະຖືກລົງວິໄນທັນທີສຳລັບແນວຄິດໃດກໍຕາມທີ່ຜິດ.
3. ເຮົາຈະວາງຄົນທີ່ບໍ່ເຊື່ອໃນເຮົາໄວ້ອີກດ້ານໜຶ່ງ. ເຮົາຈະໃຫ້ພວກເຂົາເວົ້າ ແລະ ປະພຶດຢ່າງເລີນເລີ້ຈົນເຖິງວາລະສຸດທ້າຍເຊິ່ງເຮົາຈະລົງໂທດພວກເຂົາທັງໝົດ ແລະ ຈັດລຳດັບພວກເຂົາ.
4. ສຳລັບຄົນທີ່ເຊື່ອໃນເຮົາ, ເຮົາຈະເບິ່ງແຍງພວກເຂົາ ແລະ ປົກປ້ອງພວກເຂົາຕະລອດເວລາ. ເຮົາຈະຈັດຊີວິດໃຫ້ກັບພວກເຂົາໂດຍໃຊ້ຫົນທາງແຫ່ງຄວາມລອດພົ້ນຢູ່ສະເໝີ. ຄົນເຫຼົ່ານີ້ຈະມີຄວາມຮັກຂອງເຮົາ ແລະ ພວກເຂົາຈະບໍ່ລົ້ມເຫຼວ ຫຼື ສູນເສຍຫົນທາງຂອງພວກເຂົາຢ່າງແນ່ນອນ. ຄວາມອ່ອນແອໃດກໍຕາມທີ່ພວກເຂົາມີກໍເປັນສິ່ງຊົ່ວຄາວ ແລະ ເຮົາຈະບໍ່ຈື່ຄວາມອ່ອນແອຂອງພວກເຂົາຢ່າງແນ່ນອນ.
5. ສຳລັບຄົນທີ່ເບິ່ງຄືເຊື່ອ ແຕ່ບໍ່ໄດ້ເຊື່ອແທ້ໆ ໝາຍເຖິງຄົນທີ່ເຊື່ອວ່າມີພຣະເຈົ້າ, ແຕ່ບໍ່ໄດ້ສະແຫວງຫາພຣະຄຣິດ ແຕ່ກໍບໍ່ໄດ້ຕໍ່ຕ້ານ, ຄົນເຫຼົ່ານີ້ເປັນຕາເວດທະນາທີ່ສຸດ ແລະ ເຮົາຈະເຮັດໃຫ້ພວກເຂົາໄດ້ເຫັນຢ່າງຊັດເຈນຜ່ານທາງການກະທຳຂອງເຮົາ. ໂດຍວິທີການກະທຳຂອງເຮົາ, ເຮົາຈະຊ່ວຍຄົນປະເພດເຫຼົ່ານີ້ໃຫ້ລອດພົ້ນ ແລະ ນຳພວກເຂົາກັບມາ.

6. ລູກຊາຍກົກຜູ້ທີ່ຍອມຮັບນາມຂອງເຮົາກ່ອນກໍຈະໄດ້ຮັບພອນ! ເຮົາຈະປະທານພອນທີ່ດີທີ່ສຸດໃຫ້ກັບພວກເຈົ້າຢ່າງແນ່ນອນ, ອະນຸຍາດໃຫ້ພວກເຈົ້າຊື່ນຊົມພວກມັນຈົນພວກເຈົ້າພໍໃຈ; ບໍ່ມີໃຜກ້າຂັດຂວາງສິ່ງນີ້ໄດ້. ທັງໝົດນີ້ຖືກຈັດກຽມໃຫ້ກັບພວກເຈົ້າທັງໝົດ, ຍ້ອນນີ້ແມ່ນພຣະດຳລັດຂອງເຮົາ.

ໃນທຸກໆດ້ານ ພວກເຈົ້າຄວນສາມາດເຫັນໄດ້ວ່າມືຂອງເຮົາເຮັດຫຍັງ ແລະ ເຮົາມີຄວາມຄິດຫຍັງຢູ່ໃນຫົວໃຈຂອງເຮົາ, ທຸກສິ່ງເຫຼົ່ານັ້ນບໍ່ແມ່ນເພື່ອພວກເຈົ້າບໍ? ຜູ້ໃດທ່າມກາງພວກເຈົ້າທີ່ຢູ່ເພື່ອເຮົາ? ເຈົ້າໄດ້ກວດສອບເບິ່ງຄວາມຄິດທີ່ຢູ່ໃນຫົວໃຈຂອງເຈົ້າ ຫຼື ຄຳເວົ້າທີ່ເຈົ້າເວົ້າແລ້ວບໍ? ເຈົ້າໄດ້ປະຕິບັດສິ່ງເຫຼົ່ານີ້ຢ່າງຈິງຈັງແລ້ວບໍ? ຊ່າງໂງ່ແທ້ເດ! ຊ່າງເສເພແທ້ເດ! ເຈົ້າບໍ່ຍອມຮັບເອົາການຫ້າມປາມຂອງພຣະວິນຍານບໍລິສຸດ! ເຮົາໄດ້ປ່ອຍສຽງຂອງເຮົາຄັ້ງແລ້ວຄັ້ງເລົ່າຢູ່ພາຍໃນເຈົ້າ, ແຕ່ກໍບໍ່ມີປະຕິກິລິຍາຕອບໂຕ້ເລີຍ. ຢ່າໂງ່ອີກຕໍ່ໄປເລີຍ! ໜ້າທີ່ຂອງເຈົ້າແມ່ນເພື່ອເຂົ້າໃຈຄວາມປະສົງຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນເສັ້ນທາງທີ່ເຈົ້າຄວນເຂົ້າສູ່. ພວກເຈົ້າສັບສົນ, ພວກເຈົ້າບໍ່ມີຄວາມເຂົ້າໃຈ, ພວກເຈົ້າບໍ່ເຫັນຢ່າງຊັດເຈນໃນສິ່ງທີ່ເຮົາຕ້ອງການເຮັດໃຫ້ສຳເລັດໃນພວກເຈົ້າ ຫຼື ສິ່ງທີ່ເຮົາຕ້ອງການຮັບເອົາຈາກພວກເຈົ້າ! ເພື່ອທີ່ຈະເຂົ້າໃຈຄວາມປະສົງຂອງເຮົາ ເຈົ້າຕ້ອງເລີ່ມຕົ້ນດ້ວຍການຫຍັບເຂົ້າໃກ້ເຮົາກ່ອນ ແລະ ສົນທະນາກັບເຮົາຫຼາຍຍິ່ງຂຶ້ນ. ເຈົ້າເວົ້າຢູ່ສະເໝີວ່າເຈົ້າບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ; ຖ້າເຈົ້າເຕັມໄປດ້ວຍສິ່ງຕ່າງໆຂອງເຈົ້າແລ້ວ, ແລ້ວເຮົາຈະສາມາດປະຕິບັດພາລະກິດໃນຕົວເຈົ້າໄດ້ແນວໃດ? ເຈົ້າບໍ່ມາຢູ່ຕໍ່ໜ້າເຮົາຢ່າງຫ້າວຫັນ, ພຽງແຕ່ລໍຖ້າໂດຍຄິດລົບໆ. ເຮົາເວົ້າວ່າເຈົ້າເປັນຄືກັບໝອນ, ແຕ່ເຈົ້າກໍຮູ້ສຶກເປັນທຸກ ແລະ ເຈົ້າກໍບໍ່ຍອມຮັບມັນ. ເວລານີ້ເຈົ້າຄວນລຸກຂຶ້ນ ແລະ ຮ່ວມມືກັບເຮົາ! ຢ່າຄິດລົບ! ສິ່ງນັ້ນຈະຂັດຂວາງຊີວິດຂອງເຈົ້າ. ການຫ້າວຫັນຈະນຳຜົນປະໂຫຍດມາໃຫ້ກັບເຈົ້າເອງ, ບໍ່ແມ່ນໃຫ້ກັບຄົນອື່ນ. ເຈົ້າຍັງບໍ່ຮັບຮູ້ ແລະ ເຂົ້າໃຈສິ່ງນີ້ອີກບໍ? ຄວາມປະສົງຂອງເຮົາຖືກເປີດເຜີຍໃນຕົວເຈົ້າຢ່າງສະໝໍ່າສະເໝີ, ເຈົ້າບໍ່ໄດ້ຮັບຮູ້ເຖິງສິ່ງນັ້ນບໍ? ເປັນຫຍັງເຈົ້າຈຶ່ງບໍ່ໃສ່ໃຈກັບສິ່ງນັ້ນຈັກເທື່ອ? ແລ້ວເປັນຫຍັງເຈົ້າຈຶ່ງບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາຈັກເທື່ອ? ການເຂົ້າໃຈຄວາມປະສົງຂອງເຮົາແມ່ນບໍ່ໄດ້ນຳຜົນດີຫຍັງມາໃຫ້ກັບເຈົ້າບໍ?

ເຮົາຫວັງວ່າເຈົ້າຈະສາມາດຄຳນຶງເຖິງຄວາມປະສົງຂອງເຮົາໃນທຸກໆດ້ານ ເພື່ອວ່າເຮົາຈະມີທາງໄປ ແລະ ມີເຮືອນໃຫ້ພັກຜ່ອນໃນຕົວເຈົ້າ. ຢ່າຂັດຂວາງເຮົາອີກຕໍ່ໄປເລີຍ, ມັນໂຫດຮ້າຍເກີນໄປ! ເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບພຣະທຳຂອງເຮົາ ແລະ ບໍ່ມີປະຕິກິລິຍາຕອບໂຕ້ຕໍ່ພຣະທຳເຫຼົ່ານັ້ນ. ໃຫ້ເບິ່ງຕອນນີ້ເປັນແນວໃດບໍ່ມີການລໍຖ້າອີກຕໍ່ໄປແລ້ວ! ຖ້າເຈົ້າບໍ່ຕິດຕາມບາດກ້າວຂອງເຮົາຢ່າງໃກ້ຊິດແລ້ວມັນກໍຊ້າເກີນໄປແລ້ວ, ແຮງໄກທີ່ຈະມີທາງໃຫ້ເຈົ້າສາມາດໄຖ່ມັນໄດ້!

# ບົດທີ 57

ເຈົ້າໄດ້ກວດສອບເບິ່ງຄວາມຄິດ ແລະ ແນວຄິດແຕ່ລະຢ່າງຂອງເຈົ້າ ແລະ ການກະທຳທຸກຢ່າງຂອງເຈົ້າແລ້ວບໍ? ເຈົ້າມີແນວຄິດທີ່ຊັດເຈນກ່ຽວກັບວ່າສິ່ງໃດແມ່ນສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ສິ່ງໃດບໍ່ສອດຄ່ອງ? ເຈົ້າບໍ່ສາມາດແຍກແຍະສິ່ງນີ້ໄດ້ແທ້ໆ! ແລ້ວເປັນຫຍັງເຈົ້າຈຶ່ງບໍ່ມາຢູ່ຕໍ່ໜ້າເຮົາ? ມັນເປັນຍ້ອນເຮົາບໍ່ໄດ້ບອກເຈົ້າບໍ ຫຼື ຍ້ອນເຫດຜົນອື່ນ? ເຈົ້າຄວນຮູ້ສິ່ງນີ້! ຈົ່ງຮູ້ວ່າຄົນທີ່ບໍ່ເອົາໃຈໃສ່ແມ່ນຈະບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ ຫຼື ຮັບເອົາແສງເຍືອງທາງ ຫຼື ການເປີດເຜີຍທີ່ຍິ່ງໃຫຍ່ໃດໆຢ່າງແນ່ນອນ.

ເຈົ້າໄດ້ຄົ້ນພົບເຫດຜົນທີ່ວ່າ ເປັນຫຍັງຄຣິສຕະຈັກຈຶ່ງບໍ່ໄດ້ຮັບການຫຼໍ່ລ້ຽງ ແລະ ຂາດການສົນທະນາຢ່າງແທ້ຈິງ? ເຈົ້າຮູ້ຕົວບໍວ່າ ມີຈັກປັດໃຈທີ່ກ່ຽວຂ້ອງກັບເຈົ້າທີ່ນຳພາໄປສູ່ເຫດການແບບນີ້? ເຮົາສັ່ງສອນເຈົ້າໃຫ້ສະໜອງຊີວິດ ແລະ ປ່ອຍສຽງຂອງເຮົາອອກ. ເຈົ້າໄດ້ເຮັດສິ່ງເຫຼົ່ານີ້ແລ້ວບໍ? ເຈົ້າຈະສາມາດຮັບຜິດຊອບກັບການຫ່ວງດຶງຄວາມກ້າວໜ້າໃນຊີວິດຂອງອ້າຍເອື້ອຍນ້ອງເຈົ້າໄດ້ບໍ? ເມື່ອເຈົ້າຜະເຊີນກັບບັນຫາ ແທນທີ່ເຈົ້າຈະໃຈເຢັນ ແລະ ສະຫງົບ ເຈົ້າວິຕົກກັງວົນ. ເຈົ້າຊ່າງຂາດຄວາມຮູ້ແທ້ໆ! ສຽງຂອງເຮົາຄວນຖືກປ່ອຍອອກໃຫ້ກັບໄພ່ພົນ. ຢ່າສະກັດກັ້ນພາລະກິດຂອງພຣະວິນຍານບໍລິສຸດ ແລະ ຢ່າຫ່ວງດຶງເຮົາຜ່ານການເລື່ອນເວລາ; ມັນບໍ່ມີປະໂຫຍດໃຫ້ກັບໃຜເລີຍ. ເຮົາຕ້ອງການໃຫ້ເຈົ້າອຸທິດຕົນໃຫ້ກັບເຮົາຢ່າງສົມບູນ ທັງດ້ານຮ່າງກາຍ ແລະ ຄວາມຄິດ ເພື່ອວ່າທຸກຄວາມຄິດ ແລະ ແນວຄິດຂອງເຈົ້າຈະເປັນຂອງເຮົາ, ເພື່ອເຈົ້າຈະແບ່ງປັນຄວາມຄິດ ແລະ ຄວາມກັງວົນຂອງເຮົາ ແລະ ເພື່ອວ່າທຸກສິ່ງທີ່ເຈົ້າເຮັດຈະແມ່ນເພື່ອເຫັນແກ່ອານາຈັກໃນປັດຈຸບັນ ແລະ ການຄຸ້ມຄອງຂອງເຮົາ ແລະ ບໍ່ແມ່ນເພື່ອຕົວເຈົ້າເອງ. ມີພຽງແຕ່ສິ່ງນັ້ນຈະເຮັດໃຫ້ເຮົາພໍໃຈ.

ບໍ່ມີສິ່ງໃດທີ່ເຮົາກະທຳທີ່ປາສະຈາກການພິສູດ. ເປັນຫຍັງເຈົ້າຈຶ່ງບໍ່ເອົາເຮົາເປັນແບບຢ່າງ? ເປັນຫຍັງເຈົ້າຈຶ່ງບໍ່ສະແຫວງຫາຂໍ້ພິສູດໃນສິ່ງທີ່ເຈົ້າເຮັດ? ເຈົ້າຈະໃຫ້ເຮົາເວົ້າຫຍັງຕື່ມອີກ? ເຮົາຈັບມືເຈົ້າເພື່ອສັ່ງສອນເຈົ້າ, ແຕ່ເຈົ້າກໍບໍ່ສາມາດຮຽນຮູ້, ເຈົ້າຊ່າງໂງ່ຫຼາຍ! ເຈົ້າປາຖະໜາທີ່ຈະເລີ່ມຕົ້ນໃໝ່ທັງໝົດບໍ? ຢ່າທໍ້ຖອຍໃຈ. ເຈົ້າຕ້ອງກັບຄືນມາເປັນຕົວຂອງເຈົ້າເອງອີກຄັ້ງ ແລະ ອຸທິດຕົນທັງໝົດແທນຄວາມຫວັງ ແລະ ຄວາມປາຖະໜາທີ່ຮ່ວມກັນຂອງໄພ່ພົນ. ຈົ່ງຈື່ຈຳພຣະທຳເຫຼົ່ານັ້ນ "ສຳລັບຄົນທີ່ເສຍສະຫຼະເພື່ອເຮົາຢ່າງຈິງໃຈ, ເຮົາຈະອວຍພອນເຈົ້າຢ່າງຫຼວງຫຼາຍແນ່ນອນ".

ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ ກໍຕ້ອງເຮັດໃນຮູບແບບທີ່ເປັນລະບຽບ, ບໍ່ແມ່ນຕາມບຸນຕາມກຳ. ເຈົ້າກ້າອ້າງແທ້ບໍວ່າ ເຈົ້າຮູ້ຈັກສະພາບຂອງໄພ່ພົນຄືກັບຫຼັງມືຂອງເຈົ້າ? ນັ້ນສະແດງໃຫ້ເຫັນວ່າ ເຈົ້າກຳລັງຂາດສະຕິປັນຍາ, ເຈົ້າບໍ່ໄດ້ຈິງຈັງກັບບັນຫານີ້ ແລະ ບໍ່ໄດ້ເສຍເວລາກັບມັນເລີຍ. ຖ້າເຈົ້າສາມາດໃຊ້ເວລາທັງໝົດຂອງເຈົ້າກັບສິ່ງນີ້ຢ່າງແທ້ຈິງ, ແລ້ວເຈົ້າກໍຈະເຫັນພຽງແຕ່ວ່າ ສະພາບພາຍໃນຂອງເຈົ້າຈະເປັນແນວໃດ. ເຈົ້າບໍ່ສະແຫວງຫາເພື່ອສ້າງຄວາມພະຍາຍາມແບບອັດວິໄສ; ເຈົ້າພຽງຊອກຫາເຫດຜົນແບບພາວະວິໄສເທົ່ານັ້ນໂດຍບໍ່ໄດ້ພິຈາລະນາຄວາມປະສົງຂອງເຮົາແມ່ນແຕ່ໜ້ອຍດຽວ.

ສິ່ງນັ້ນໄດ້ເຮັດໃຫ້ເຮົາເຈັບປວດຢ່າງໜັກ! ຢ່າສືບຕໍ່ເຮັດແບບນີ້ອີກເລີຍ! ສາມາດເປັນໄປໄດ້ບໍ່ວ່າເຈົ້າບໍ່ຍອມຮັບເອົາການອວຍພອນທີ່ເຮົາໄດ້ມອບໃຫ້ກັບເຈົ້າ?

ໂອ ພຣະເຈົ້າ! ລູກຂອງພຣະອົງຕິດໜີ້ພຣະອົງ. ຂ້ານ້ອຍບໍ່ໄດ້ຈິງຈັງກັບພາລະກິດຂອງພຣະອົງ ຫຼື ພິຈາລະນາເຖິງຄວາມປະສົງຂອງພຣະອົງ ຫຼື ຂ້ານ້ອຍບໍ່ໄດ້ຊື່ສັດກັບຄໍາຕັກເຕືອນຂອງພຣະອົງ. ລູກຂອງພຣະອົງປາຖະໜາທີ່ຈະຫັນສິ່ງເຫຼົ່ານີ້ກັບຄືນມາ. ຂໍໃຫ້ພຣະອົງຢ່າປະຖິ້ມຂ້ານ້ອຍ ແລະ ຂໍໃຫ້ພຣະອົງສືບຕໍ່ປະຕິບັດພາລະກິດຂອງພຣະອົງຜ່ານຂ້ານ້ອຍ. ໂອ ພຣະເຈົ້າ! ຢ່າຖິ້ມໃຫ້ລູກຂອງພຣະອົງຢູ່ດ້ວຍຕົນເອງ! ກົງກັນຂ້າມ, ກາລຸນາໄປກັບຂ້ານ້ອຍໃນທຸກໄລຍະເວລາ. ໂອ ພຣະເຈົ້າ! ລູກຂອງພຣະອົງຮູ້ວ່າ ພຣະອົງຮັກຂ້ານ້ອຍ, ແຕ່ຂ້ານ້ອຍບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະອົງໄດ້; ຂ້ານ້ອຍບໍ່ຮູ້ຈັກວິທີເອົາໃຈໃສ່ຕໍ່ພາລະຂອງພຣະອົງ ຫຼື ວິທີທີ່ຈະເຮັດໃຫ້ສິ່ງທີ່ພຣະອົງໄດ້ມອບໝາຍໃຫ້ກັບຂ້ານ້ອຍນັ້ນສໍາເລັດ. ແລ້ວແຮງໄກທີ່ຂ້ານ້ອຍຈະຮູ້ຈັກວິທີລ້ຽງດູຄຣິດຕະຈັກ. ພຣະອົງຮູ້ວ່າ ຂ້ານ້ອຍເສົ້າໃຈ ແລະ ອຸກໃຈກ່ຽວກັບສິ່ງນີ້. ໂອ ພຣະເຈົ້າ! ຈົ່ງໂຜດນໍາພາຂ້ານ້ອຍຕະຫຼອດເວລາ. ບັດນີ້ຂ້ານ້ອຍຮູ້ແລ້ວວ່າ ຂ້ານ້ອຍຂາດເຂີນຫຼາຍສໍ່າໃດ, ຂ້ານ້ອຍຂາດເຂີນຫຼາຍເກີນໄປແທ້ໆ! ຂ້ານ້ອຍບໍ່ສາມາດອະທິບາຍໄດ້ວ່າຫຼາຍປານໃດ. ຂໍໃຫ້ມືທີ່ມີລິດທານຸພາບສູງສຸດຂອງພຣະອົງສະແດງຄວາມເມດຕາຕໍ່ລູກຂອງພຣະອົງ, ສົ່ງເສີມຂ້ານ້ອຍຢູ່ຕະຫຼອດເວລາ ແລະ ເຮັດໃຫ້ຂ້ານ້ອຍກົ້ມຂາບລົງຕໍ່ໜ້າພຣະອົງຢ່າງແທ້ຈິງ, ໂດຍບໍ່ມີການສ້າງທາງເລືອກຂອງຂ້ານ້ອຍເອງອີກຕໍ່ໄປ ແລະ ບໍ່ມີຄວາມຄິດ ຫຼື ແນວຄິດເປັນຂອງຕົນເອງອີກຕໍ່ໄປ. ໂອ ພຣະເຈົ້າ! ພຣະອົງຮູ້ວ່າ ລູກຂອງພຣະອົງປາຖະໜາທີ່ຈະເຮັດທຸກສິ່ງເພື່ອພຣະອົງທັງໝົດ ແລະ ເພື່ອເຫັນແກ່ອານາຈັກໃນປັດຈຸບັນ. ພຣະອົງຮູ້ເຖິງສິ່ງທີ່ຂ້ານ້ອຍກໍາລັງຄິດ ແລະ ສິ່ງທີ່ຂ້ານ້ອຍກໍາລັງເຮັດໃນໄລຍະເວລານີ້. ໂອ ພຣະເຈົ້າ! ຂໍໃຫ້ຄົ້ນຫາຂ້ານ້ອຍດ້ວຍຕົວພຣະອົງເອງ. ຂ້ານ້ອຍພຽງແຕ່ຂໍໃຫ້ພຣະອົງຍ່າງກັບຂ້ານ້ອຍ ແລະ ຢູ່ໃນຊີວິດຂອງຂ້ານ້ອຍຕະຫຼອດເວລາ, ເພື່ອວ່າ ພະລັງຂອງພຣະອົງຈະຕິດຕາມທຸກສິ່ງທີ່ຂ້ານ້ອຍເຮັດ.

# ບົດທີ 58

ຖ້າເຈົ້າເຂົ້າໃຈຄວາມຕັ້ງໃຈຂອງເຮົາ, ເຈົ້າຈະສາມາດພິຈາລະນາພາລະຂອງເຮົາໄດ້ ແລະ ເຈົ້າກໍ່ຈະສາມາດໄດ້ຮັບຄວາມສະຫວ່າງ ແລະ ການເປີດເຜີຍໄດ້ ແລະ ໄດ້ຮັບການປົດປ່ອຍ ແລະ ອິດສະຫຼະພາບ. ນີ້ເປັນທີ່ພໍໃຈເຮົາ ແລະ ເຮັດໃຫ້ຄວາມປະສົງຂອງເຮົາຖືກດຳເນີນການໃນຕົວເຈົ້າ, ນຳເອົາການສັ່ງສອນມາສູ່ໄພ່ພົນທັງຫຼາຍ ແລະ ເຮັດໃຫ້ອານາຈັກຂອງເຮົາໝັ້ນຄົງ ແລະ ຖາວອນຢູ່ເທິງແຜ່ນດິນໂລກ. ສິ່ງສຳຄັນທີ່ສຸດໃນຕອນນີ້ຄືການເຂົ້າໃຈຄວາມຕັ້ງໃຈຂອງເຮົາ; ນີ້ແມ່ນເສັ້ນທາງທີ່ພວກເຈົ້າຄວນເຂົ້າສູ່ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນໜ້າທີ່ຂອງທຸກຄົນທີ່ຕ້ອງໄດ້ປະຕິບັດໃຫ້ສຳເລັດ.

ພຣະທຳຂອງເຮົາແມ່ນຢາທີ່ດີທີ່ປິ່ນປົວການເຈັບປ່ວຍທຸກຮູບແບບ. ຕາບໃດທີ່ເຈົ້າເຕັມໃຈທີ່ຈະມາຢູ່ຕໍ່ໜ້າເຮົາ, ເຮົາຈະປິ່ນປົວເຈົ້າ ແລະ ໃຫ້ເຈົ້າເຫັນການມີອຳນາດໃນທຸກຢ່າງຂອງເຮົາ, ເຫັນການກະທຳຢ່າງມະຫັດສະຈັນຂອງເຮົາ, ເຫັນຄວາມທ່ຽງທຳ ແລະ ຄວາມສະຫງ່າງາມຂອງເຮົາ. ຍິ່ງໄປກວ່ານັ້ນ ເຮົາຈະໃຫ້ພວກເຈົ້າເຫັນຄວາມເສື່ອມຊາມ ແລະ ຄວາມອ່ອນແອໃນຕົວພວກເຈົ້າເອງ. ເຮົາເຂົ້າໃຈທຸກສະຖານະພາບໃນຕົວເຈົ້າທັງໝົດ; ເຈົ້າປະຕິບັດສິ່ງຕ່າງໆຢູ່ໃນໃຈເຈົ້າສະເໝີ ແລະ ບໍ່ສະແດງມັນອອກມາຂ້າງນອກ. ເຮົາຍິ່ງຮູ້ຊັດເຈນກ່ຽວກັບທຸກສິ່ງທີ່ເຈົ້າກະທຳ. ຢ່າງໃດກໍຕາມ, ເຈົ້າຄວນຮູ້ວ່າສິ່ງໃດທີ່ເຮົາສັນລະເສີນ ແລະ ສິ່ງໃດທີ່ເຮົາບໍ່ສັນລະເສີນ; ເຈົ້າຄວນແຍກແຍະລະຫວ່າງສອງສິ່ງນີ້ຢ່າງຊັດເຈນ ແລະ ເຈົ້າຕ້ອງບໍ່ໃຊ້ທັດສະນະຄະຕິທີ່ເປັນກັນເອງກັບສິ່ງນີ້.

ການເວົ້າວ່າ "ພວກເຮົາຕ້ອງສະແດງຄວາມພິຈາລະນາຕໍ່ພາລະຂອງພຣະເຈົ້າ", ເຈົ້າພຽງແຕ່ຮັບໃຊ້ດ້ວຍປາກເທົ່ານັ້ນ. ແຕ່ເມື່ອເຈົ້າຜະເຊີນໜ້າກັບຂໍ້ເທັດຈິງ, ເຈົ້າບໍ່ໄດ້ໃຫ້ການພິຈາລະນາໃດໆ ເຖິງແມ່ນເຈົ້າຮູ້ຢ່າງຊັດເຈນແລ້ວວ່າພາລະຂອງພຣະເຈົ້າແມ່ນຫຍັງ. ເຈົ້າສັບສົນທີ່ສຸດ, ໂງ່ຈ້າທີ່ສຸດ ແລະ ຍິ່ງໄປກວ່ານັ້ນ ຍັງຂາດຄວາມຮູ້ໃນທຸກດ້ານ. ສິ່ງນີ້ອະທິບາຍເຖິງຄວາມຫຍຸ້ງຍາກໃນການຈັດການກັບມະນຸດ ແລະ ທຸກສິ່ງທີ່ພວກເຂົາປະຕິບັດແມ່ນການຮັບໃຊ້ຄຳເວົ້າທີ່ຟັງເບິ່ງຄືວ່າດີ ເຊັ່ນ: "ຂ້ານ້ອຍພຽງແຕ່ບໍ່ສາມາດເຂົ້າໃຈຄວາມຕັ້ງໃຈຂອງພຣະເຈົ້າ ຖ້າຂ້ານ້ອຍເຂົ້າໃຈ ຂ້ານ້ອຍກໍຈະປະຕິບັດຕາມຢ່າງແນ່ນອນ". ນີ້ບໍ່ແມ່ນສະພາບແທ້ຈິງຂອງພວກເຈົ້າບໍ? ເຖິງແມ່ນວ່າພວກເຈົ້າທຸກຄົນຮູ້ຈັກຄວາມຕັ້ງໃຈຂອງພຣະເຈົ້າ ແລະ ຮູ້ວ່າສາເຫດຄວາມເຈັບປ່ວຍຂອງພວກເຈົ້າແມ່ນຫຍັງ, ສິ່ງສຳຄັນກໍຄືພວກເຈົ້າບໍ່ເຕັມໃຈທີ່ຈະປະຕິບັດຕາມ; ນີ້ແມ່ນຄວາມຫຍຸ້ງຍາກຫຼາຍທີ່ສຸດຂອງພວກເຈົ້າ. ຖ້າພວກເຈົ້າບໍ່ແກ້ໄຂສິ່ງນີ້ໂດຍໄວ, ມັນຈະເປັນມານຂັດຂວາງໃນຊີວິດຂອງພວກເຈົ້າຢ່າງໃຫຍ່ຫຼວງ.

# ບົດທີ 59

ຈົ່ງສະແຫວງຫາຄວາມປະສົງຂອງເຮົາຫຼາຍຂຶ້ນໃນສະພາບແວດລ້ອມທີ່ເຈົ້າຜະເຊີນຢູ່ ແລະ ເຈົ້າຈະໄດ້ຮັບການອະນຸມັດຈາກເຮົາຢ່າງແນ່ນອນ. ຕາບໃດທີ່ເຈົ້າເຕັມໃຈທີ່ຈະຄົ້ນຫາ ແລະ ຮັກສາຄວາມເຄົາລົບສຳລັບເຮົາ, ເຮົາຈະປະທານທຸກສິ່ງທີ່ເຈົ້າຂາດເຂີນໃຫ້ແກ່ເຈົ້າ. ປັດຈຸບັນນີ້ ຄຣິສຕະຈັກແມ່ນເຂົ້າສູ່ການຝຶກຝົນຢ່າງເປັນທາງການ ແລະ ທຸກສິ່ງຄືເສັ້ນທາງທີ່ຖືກຕ້ອງ. ສິ່ງຕ່າງໆຈະບໍ່ຄືເກົ່າອີກຕໍ່ໄປເມື່ອມັນໄດ້ຊີມລົດຊາດໃນສິ່ງທີ່ຈະມາເຖິງ. ພວກເຈົ້າບໍ່ຕ້ອງສັບສົນ ຫຼື ປາສະຈາກຄວາມຮູ້ແຈ້ງອີກຕໍ່ໄປ. ເປັນຫຍັງເຮົາຈຶ່ງຮຽກຮ້ອງໃຫ້ພວກເຈົ້າເຂົ້າສູ່ຄວາມເປັນຈິງໃນທຸກສິ່ງ? ເຈົ້າເຄີຍມີປະສົບການກັບສິ່ງນີ້ແທ້ບໍ? ພວກເຈົ້າສາມາດເຮັດໃຫ້ເຮົາພໍໃຈຢ່າງແທ້ຈິງໃນສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າ, ດັ່ງທີ່ເຮົາເຮັດໃຫ້ພວກເຈົ້າພໍໃຈບໍ? ຢ່າຫຼອກລວງເລີຍ! ເຮົາພຽງສືບຕໍ່ອົດທົນຕໍ່ພວກເຈົ້າຄັ້ງແລ້ວຄັ້ງເລົ່າ ແຕ່ພວກເຈົ້າກໍຍັງບໍ່ສາມາດບອກຄວາມແຕກຕ່າງລະຫວ່າງຄວາມດີ ແລະ ຄວາມຊົ່ວຊໍ້າແລ້ວຊໍ້າອີກ ແລະ ລົ້ມເຫຼວໃນການສະແດງເຖິງຄຸນຄ່າໃນສິ່ງນັ້ນ!

ຄວາມທ່ຽງທຳຂອງເຮົາ, ຄວາມສະຫງ່າງາມຂອງເຮົາ, ການພິພາກສາຂອງເຮົາ ແລະ ຄວາມຮັກຂອງເຮົາ; ທຸກສິ່ງເຫຼົ່ານີ້ຄືສິ່ງທີ່ເຮົາມີ ແລະ ຄືສິ່ງທີ່ເຮົາເປັນ; ເຈົ້າເຄີຍໄດ້ຊີມລົດຊາດພວກມັນແທ້ບໍ? ເຈົ້າຊ່າງໄຮ້ຄວາມຄິດແທ້ໆ ແລະ ເຈົ້າຢືນຢັນທີ່ຈະບໍ່ຮັບຮູ້ຄວາມປະສົງຂອງເຮົາ. ເຮົາໄດ້ບອກພວກເຈົ້າຊໍ້າແລ້ວຊໍ້າອີກວ່າພວກເຈົ້າເອງຕ້ອງຊີມລົດຊາດອາຫານທີ່ເຮົາຈັດຕຽມໄວ້ໃຫ້, ແຕ່ພວກເຈົ້າກໍປະຕິເສດພວກມັນຊໍ້າແລ້ວຊໍ້າອີກ ແລະ ບໍ່ສາມາດບອກເຖິງສະພາບແວດລ້ອມທີ່ດີຈາກສະພາບແວດລ້ອມທີ່ບໍ່ດີໄດ້. ມີສະພາບແວດລ້ອມໃດບໍໃນບັນດາສະພາບແວດລ້ອມເຫຼົ່ານີ້ທີ່ຖືກສ້າງຂຶ້ນໂດຍຕົວພວກເຈົ້າເອງ? ອັນໃດທີ່ຖືກຈັດແຈງໂດຍມືຂອງເຮົາ? ຢ່າປົກປ້ອງຕົວເອງເລີຍ! ເຮົາເຫັນທຸກສິ່ງຢ່າງຊັດເຈນ ແລະ ຄວາມຈິງກໍຄືເຈົ້າບໍ່ໄດ້ສະແຫວງຫາເລີຍ. ເຮົາສາມາດເວົ້າຫຍັງໄດ້ອີກຢູ່ບໍ?

ເຮົາຈະເອົາໃຈທຸກຄົນທີ່ຮັບຮູ້ຄວາມປະສົງຂອງເຮົາສະເໝີ ແລະ ເຮົາຈະບໍ່ຍອມໃຫ້ພວກເຂົາຕ້ອງທົນທຸກທໍລະມານ ຫຼື ໄດ້ຮັບອັນຕະລາຍ. ສິ່ງທີ່ສຳຄັນທີ່ສຸດໃນຕອນນີ້ກໍຄືການສາມາດດຳເນີນການໃຫ້ສອດຄ່ອງກັບຄວາມປະສົງຂອງເຮົາ. ບັນດາຜູ້ທີ່ປະຕິບັດສິ່ງນີ້ຈະໄດ້ຮັບພອນຂອງເຮົາຢ່າງແນ່ນອນ ແລະ ຈະຢູ່ພາຍໃຕ້ການຄຸ້ມຄອງຂອງເຮົາ. ໃຜສາມາດອຸທິດຕົນເອງທັງໝົດເພື່ອເຮົາໄດ້ຢ່າງແທ້ຈິງ ແລະ ມອບທຸກສິ່ງທີ່ພວກເຂົາມີໃຫ້ແກ່ເຮົາບໍ? ພວກເຈົ້າທັງໝົດເປັນຄົນສອງຈິດສອງໃຈ; ຄວາມຄິດຂອງພວກເຈົ້າວົນໄປວຽນມາ, ຄິດຮອດເຮືອນ, ຄິດຮອດໂລກພາຍນອກ, ອາຫານ ແລະ ເຄື່ອງນຸ່ງຫົ່ມ. ເຖິງແມ່ນວ່າທີ່ຈິງແລ້ວເຈົ້າແມ່ນຢູ່ຕໍ່ໜ້າເຮົາ, ກຳລັງປະຕິບັດສິ່ງຕ່າງໆເພື່ອເຮົາ, ແຕ່ເລິກໆແລ້ວ ເຈົ້າຍັງຄິດຮອດເມຍ, ລູກ ແລະ ພໍ່ແມ່ຢູ່ເຮືອນ. ທັງໝົດນີ້ແມ່ນຊັບສົມບັດຂອງເຈົ້າບໍ? ເປັນຫຍັງເຈົ້າຈຶ່ງບໍ່ມອບພວກເຂົາໄວ້ໃນມືຂອງເຮົາ? ເຈົ້າບໍ່ມີຄວາມເຊື່ອຢ່າງພຽງພໍໃນໃນຕົວເຮົາບໍ? ຫຼື ມັນເປັນເພາະວ່າເຈົ້າຢ້ານເຮົາຈະຈັດແຈງຢ່າງບໍ່ເໝາະສົມສຳລັບເຈົ້າບໍ? ເປັນຫຍັງເຈົ້າຈຶ່ງເປັນຫ່ວງກ່ຽວກັບຄອບຄົວແຫ່ງເນື້ອໜັງຂອງເຈົ້າຢູ່ສະເໝີ? ເຈົ້າປາດຖະໜາຫາຄົນທີ່ເປັນທີ່ຮັກຂອງເຈົ້າສະເໝີ!

ເຮົາມີພື້ນທີ່ໃດໜຶ່ງຢູ່ໃນຫົວໃຈຂອງເຈົ້າຢູ່ບໍ? ເຈົ້າຍັງເວົ້າເຖິງການປ່ອຍໃຫ້ເຮົາມີອຳນາດໃນຕົວເຈົ້າ ແລະ ຄອບຄອງການເປັນຢູ່ທັງໝົດຂອງເຈົ້າ: ທັງໝົດເຫຼົ່ານີ້ລ້ວນແລ້ວແຕ່ແມ່ນການຂີ້ຕົວະຫຼອກລວງ! ມີຈັກຄົນໃນພວກເຈົ້າທີ່ອຸທິດຕົນເພື່ອຄຣິສຕະຈັກຢ່າງໝົດຫົວໃຈ? ມີໃຜໃນພວກເຈົ້າທີ່ບໍ່ຄິດເຫັນແຕ່ຕົວເອງ, ແຕ່ກຳລັງປະຕິບັດເພື່ອອານາຈັກແຫ່ງປັດຈຸບັນ? ຈົ່ງຄິດຢ່າງຮອບຄອບກ່ຽວກັບເລື່ອງນີ້.

ພວກເຈົ້າໄດ້ຍູ້ເຮົາຈົນເຖິງຂັ້ນທີ່ເຮົາຕ້ອງໄດ້ໃຊ້ມືຂອງເຮົາໂຈມຕີພວກເຈົ້າ ແລະ ຂັບເຄື່ອນພວກເຈົ້າໄປຂ້າງໜ້າ; ເຮົາຈະບໍ່ຍົວະເຈົ້າອີກຕໍ່ໄປ. ນີ້ກໍຍ້ອນວ່າເຮົາແມ່ນພຣະເຈົ້າທີ່ສະຫຼາດ ແລະ ເຮົາປະຕິບັດຕໍ່ແຕ່ລະຄົນໃນຮູບແບບທີ່ແຕກຕ່າງກັນ, ຂຶ້ນຢູ່ກັບວ່າພວກເຈົ້າຈິງຮັກພັກດີຕໍ່ເຮົາແນວໃດ. ເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ; ໃຜຈະກ້າຂັດຂວາງຂັ້ນຕອນຕໍ່ໄປຂອງເຮົາບໍ? ຈາກນີ້ໄປ ຜູ້ທີ່ກ້າປະຕິບັດຕໍ່ເຮົາດ້ວຍຄວາມບໍ່ຈິ່ງຮັກພັກດີຈະມາຢູ່ພາຍໃຕ້ມືແຫ່ງກົດບັນຍັດໃນການບໍລິຫານຂອງເຮົາຢ່າງແນ່ນອນ, ເພື່ອວ່າພວກເຂົາຈະຖືກເຮັດໃຫ້ຮູ້ຈັກລິດທານຸພາບສູງສຸດຂອງເຮົາ. ສິ່ງທີ່ເຮົາຕ້ອງການບໍ່ແມ່ນຄົນຈຳນວນຫຼາຍ, ແຕ່ເປັນຄົນທີ່ປະເສີດ. ເຮົາຈະປະຖິ້ມ ແລະ ລົງໂທດຜູ້ໃດກໍຕາມທີ່ບໍ່ຈິ່ງຮັກພັກດີ, ບໍ່ຊື່ສັດ ແລະ ມີພຶດຕິກຳທີ່ຄົດໂກງ ແລະ ຫຼອກລວງ. ຢ່າຄິດວ່າເຮົາຈະເມດຕາອີກຕໍ່ໄປ ຫຼື ວ່າເຮົາໜ້າຮັກ ແລະ ໃຈດີ; ຄວາມຄິດດັ່ງກ່າວແມ່ນເປັນພຽງຄວາມປາດຖະໜາສ່ວນຕົວເທົ່ານັ້ນ. ເຮົາຮູ້ວ່າຍິ່ງເຮົາຕະຫຼົກກັບເຈົ້າຫຼາຍເທົ່າໃດ ເຈົ້າຍິ່ງຄິດລົບ ແລະ ບໍ່ດິ້ນຮົນຫຼາຍເທົ່ານັ້ນ ແລະ ເຈົ້າຍິ່ງບໍ່ເຕັມໃຈທີ່ຈະປະຖິ້ມຕົວເອງຫຼາຍເທົ່ານັ້ນ. ເມື່ອຜູ້ຄົນຫຍຸ້ງຍາກຈົນເຖິງລະດັບດັ່ງກ່າວ ເຮົາກໍໄດ້ແຕ່ກະຕຸ້ນພວກເຂົາ ແລະ ລາກພວກເຂົາໄປນຳເທົ່ານັ້ນ. ຈົ່ງຮູ້ສິ່ງນີ້! ນັບແຕ່ນີ້ໄປເຮົາແມ່ນພຣະເຈົ້າຜູ້ທີ່ພິພາກສາ; ເຮົາບໍ່ແມ່ນພຣະເຈົ້າທີ່ເມດຕາ, ໃຈດີ ແລະ ເປັນພຣະເຈົ້າຜູ້ໜ້າຮັກແຫ່ງຈິນຕະນາການຂອງມະນຸດອີກຕໍ່ໄປ!

# ບົດທີ 60

ມັນບໍ່ແມ່ນເລື່ອງງ່າຍທີ່ຈະໃຫ້ຊີວິດເຕີບໃຫຍ່; ມັນຈຳເປັນຕ້ອງມີຂະບວນການ ແລະ ຍິ່ງໄປກວ່ານັ້ນ ມັນຮຽກຮ້ອງໃຫ້ພວກເຈົ້າສາມາດຈ່າຍລາຄາ ແລະ ໃຫ້ພວກເຈົ້າຮ່ວມມືກັບເຮົາພ້ອມດ້ວຍຫົວໃຈໜຶ່ງດຽວ ແລະ ເນື່ອງດ້ວຍເຫດນີ້ ເຈົ້າຈະໄດ້ຮັບການສັນລະເສີນຈາກເຮົາ. ສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງຖືກສ້າງ ແລະ ຖືກເຮັດໃຫ້ສົມບູນໂດຍພຣະທຳທີ່ເຮົາກ່າວ ແລະ ເມື່ອມີເຮົາ ທຸກສິ່ງສາມາດຖືກເຮັດໃຫ້ສຳເລັດ. ຄວາມປະສົງດຽວຂອງເຮົາກໍຄືໃຫ້ພວກເຈົ້າເຕີບໃຫຍ່ຢ່າງໄວວາ, ຮັບແບກພາລະຈາກບ່າຂອງເຮົາ, ຖືເອົາພາລະນັ້ນເປັນຂອງເຈົ້າ ແລະ ເຮັດວຽກອອກແຮງງານຂອງເຮົາແທນເຮົາ; ເມື່ອນັ້ນເທົ່ານັ້ນເຮົາຈຶ່ງຈະພໍໃຈ. ລູກຊາຍແບບໃດຈະປະຕິເສດພາລະຂອງບິດາຂອງຕົນເອງ? ບິດາປະເພດໃດທີ່ຈະບໍ່ເຮັດວຽກໜັກທັງກາງເວັນ ແລະ ກາງຄືນເພື່ອລູກຊາຍຂອງຕົນ? ແຕ່ພວກເຈົ້າບໍ່ເຂົ້າໃຈຄວາມປະສົງຂອງເຮົາ ແລະ ບໍ່ຄຳນຶງເຖິງພາລະຂອງເຮົາ; ພຣະທຳຂອງເຮົາບໍ່ມີນໍ້າໜັກສຳລັບພວກເຈົ້າ ແລະ ພວກເຈົ້າບໍ່ເຮັດຕາມພຣະທຳຂອງເຮົາທີ່ກ່າວໄວ້. ເຈົ້າເປັນເຈົ້ານາຍຂອງຕົນເອງຢູ່ສະເໝີ; ຊ່າງເຫັນແກ່ຕົວ! ເຈົ້າພຽງແຕ່ຄິດເຖິງຕົນເອງ!

ເຈົ້າເຂົ້າໃຈຄວາມປະສົງຂອງເຮົາແທ້ບໍ ຫຼື ເຈົ້າພຽງແຕ່ທຳທ່າບໍ່ເຂົ້າໃຈບໍ? ເປັນຫຍັງເຈົ້າຈຶ່ງມີຄວາມປະພຶດທີ່ບໍ່ມີເຫດຜົນແບບນັ້ນຢູ່ສະເໝີ? ຄວາມສຳນຶກຂອງເຈົ້າເວົ້າວ່າ ເຈົ້າກຳລັງໃຫ້ກຽດເຮົາໃນການເຮັດແບບນັ້ນບໍ? ເມື່ອໄດ້ຄົ້ນພົບສາເຫດຂອງຄວາມເຈັບປ່ວຍ, ເປັນຫຍັງເຈົ້າຈຶ່ງບໍ່ສື່ສານກັບເຮົາເພື່ອຫາວິທີຮັກສາ? ເຮົາຈະບອກເຈົ້າວ່າ: ຕັ້ງແຕ່ມື້ນີ້ເປັນຕົ້ນໄປ ພວກເຈົ້າຈະບໍ່ມີພະຍາດທາງຮ່າງກາຍອີກຕໍ່ໄປ. ຖ້າມີບາງສ່ວນໃນຕົວເຈົ້າທີ່ຮູ້ສຶກບໍ່ສະບາຍ ກໍຢ່າວຸ້ນວາຍຕົນເອງໃນການຊອກຫາສາເຫດພາຍນອກເລີຍ; ກົງກັນຂ້າມ, ຈົ່ງມາຢູ່ຕໍ່ໜ້າເຮົາ ແລະ ສະແຫວງຫາເພື່ອຮູ້ຈັກເຈດຕະນາຂອງເຮົາ. ເຈົ້າຈະຈື່ສິ່ງນີ້ບໍ? ນີ້ແມ່ນຄຳສັນຍາຂອງເຮົາ: ຕັ້ງແຕ່ມື້ນີ້ເປັນຕົ້ນໄປ ເຈົ້າຈະຍ່າງອອກຈາກຮ່າງກາຍທາງກາຍະພາບຂອງເຈົ້າຢ່າງສົມບູນ ແລະ ເຂົ້າສູ່ໂລກແຫ່ງຝ່າຍວິນຍານ; ນັ້ນກໍຄື ຮ່າງກາຍຂອງພວກເຈົ້າຈະບໍ່ແບກຫາບຄວາມເຈັບປ່ວຍອີກຕໍ່ໄປ. ພວກເຈົ້າມີຄວາມສຸກກັບສິ່ງນັ້ນບໍ? ເຈົ້າຮູ້ສຶກເບີກບານບໍ? ນີ້ແມ່ນຄຳສັນຍາຂອງເຮົາ. ຍິ່ງໄປກວ່ານັ້ນ ມັນຄືສິ່ງທີ່ພວກເຈົ້າຫວັງມາແຕ່ດົນ. ໃນປັດຈຸບັນນີ້ ມັນຖືກເຮັດໃຫ້ສຳເລັດໃນພວກເຈົ້າ ຜູ້ເຊິ່ງໄດ້ຮັບພອນ. ຊ່າງເປັນຕາອັດສະຈັນ ແລະ ເປັນສິ່ງທີ່ຢັ່ງບໍ່ເຖິງແທ້ໆ!

ພາລະກິດຂອງເຮົາກ້າວໜ້າທັງກາງເວັນ ແລະ ກາງຄືນ; ມັນບໍ່ເຄີຍຢຸດໃນແຕ່ລະຊ່ວງເວລາ. ນີ້ກໍຍ້ອນວ່າ ຄວາມປາຖະໜາອັນຮີບດ່ວນຂອງເຮົາແມ່ນການເຮັດໃຫ້ເຈົ້າສະແຫວງຫາຫົວໃຈຂອງເຮົາ ແລະ ຫົວໃຈຂອງເຮົາຈະຖືກພວກເຈົ້າເຮັດໃຫ້ອົບອຸ່ນ. ບຸດຊາຍຂອງເຮົາເອີຍ! ເວລາທີ່ຈະໃຫ້ພວກເຈົ້າແບ່ງປັນໃນພອນແຫ່ງຄວາມດີຂອງເຮົາໄດ້ມາເຖິງແລ້ວ! ໃນອະດີດ, ພວກເຈົ້າທົນທຸກເພື່ອນາມຂອງເຮົາ ແຕ່ບັດນີ້ ເວລາແຫ່ງການທົດສອບຂອງພວກເຈົ້າໄດ້ຜ່ານພົ້ນໄປແລ້ວ. ຖ້າໃຜກໍຕາມທີ່ກ້າທຳຮ້າຍເສັ້ນຜົມໜຶ່ງເສັ້ນເທິງຫົວຂອງບຸດຊາຍຂອງເຮົາ, ເຮົາຈະບໍ່ໃຫ້ອະໄພພວກເຂົາຢ່າງງ່າຍດາຍ ຫຼື

ພວກເຂົາຈະບໍ່ສາມາດລຸກຂຶ້ນໄດ້ອີກຈັກເທື່ອ. ນີ້ແມ່ນກົດບັນຍັດແຫ່ງການບໍລິຫານຂອງເຮົາ ແລະ ໃຜກໍຕາມທີ່ລະເມີດສິ່ງນີ້ກໍຈະພົບກັບອັນຕະລາຍ. ບຸດຊາຍຂອງເຮົາເອີຍ! ຈົ່ງເພີດເພີນຈົນເຈົ້າພໍໃຈ! ຈົ່ງຮ້ອງເພງ ແລະ ຮ້ອງອອກດ້ວຍຄວາມປິຕິຍິນດີ! ພວກເຈົ້າຈະບໍ່ຖືກກັ່ນແກ້ງ ແລະ ຖືກກົດຂີ່ອີກຕໍ່ໄປ ແລະ ພວກເຈົ້າຈະບໍ່ຕົກຢູ່ໃນການຂົ່ມເຫັງອີກຕໍ່ໄປ. ເຈົ້າຈະບໍ່ກັງວົນກ່ຽວກັບຄວາມເຊື່ອຂອງເຈົ້າໃນຕົວເຮົາອີກຕໍ່ໄປ; ເຈົ້າຄວນເຊື່ອໃນຕົວເຮົາຢ່າງເປີດເຜີຍ. ຈົ່ງຮ້ອງເຖິງນາມອັນບໍລິສຸດຂອງເຮົາເພື່ອວ່າມັນຈະດັງກ້ອງສະນັ້ນໄປທົ່ວຈັກກະວານ. ໃຫ້ພວກເຂົາເຫັນວ່າ ຄົນທີ່ພວກເຂົາດູຖູກ, ຜູ້ທີ່ຖືກພວກເຂົາທຳລາຍ ແລະ ທໍລະມານ, ໃນປັດຈຸບັນ ແມ່ນໄດ້ຢືນຢູ່ເໜືອພວກເຂົາ ແລະ ປົກຄອງພວກເຂົາ, ຄວບຄຸມພວກເຂົາ ແລະ ທີ່ສຳຄັນໄປກວ່ານັ້ນກໍຄື ໄດ້ພິພາກສາພວກເຂົາ.

ພວກເຈົ້າຄວນສົນໃຈແຕ່ກັບການເຂົ້າຫາຂອງພວກເຈົ້າເອງ ແລະ ເຮົາຈະປະທານພອນທີ່ດີຂຶ້ນໃຫ້ກັບພວກເຈົ້າ ທີ່ລໍຖ້າໃຫ້ພວກເຈົ້າໄດ້ເພີດເພີນ ແລະ ພວກເຈົ້າຈະສາມາດໄດ້ຊີມລົດຊາດຂອງຄວາມຫວານທີ່ຫາສິ່ງມາປຽບທຽບບໍ່ໄດ້, ຄວາມເລິກລັບທີ່ບໍ່ສິ້ນສຸດ ແລະ ຄວາມເລິກເຊິ່ງທີ່ຢັ່ງເຖິງບໍ່ໄດ້!

# ບົດທີ 61

ເມື່ອເຈົ້າມີຄວາມຮູ້ກ່ຽວກັບສະພາບຂອງເຈົ້າເອງ ແລ້ວເຈົ້າກໍປະຕິບັດຕາມຄວາມປະສົງຂອງເຮົາ. ໃນຄວາມຈິງແລ້ວ ຄວາມປະສົງຂອງເຮົາບໍ່ໄດ້ຍາກທີ່ຈະເຂົ້າໃຈ, ພຽງແຕ່ວ່າ ໃນອະດີດນັ້ນ ເຈົ້າບໍ່ເຄີຍສະແຫວງຫາຕາມເຈດຕະນາຂອງເຮົາຈັກເທື່ອ. ສິ່ງທີ່ເຮົາຕ້ອງການບໍ່ແມ່ນແນວຄິດຂອງມະນຸດ ຫຼື ຄວາມຄິດຂອງມະນຸດ, ແລ້ວເຮົາກໍບໍ່ໄດ້ຕ້ອງການເງິນຂອງເຈົ້າ ຫຼື ຊັບສິນຂອງເຈົ້າເລີຍ. ສິ່ງທີ່ເຮົາຕ້ອງການແມ່ນຫົວໃຈຂອງເຈົ້າ, ເຈົ້າເຂົ້າໃຈບໍ? ນີ້ແມ່ນຄວາມປະສົງຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ມັນເປັນສິ່ງທີ່ເຮົາຕ້ອງການໄດ້ຮັບ. ຜູ້ຄົນໃຊ້ແນວຄິດໃນຄວາມຄິດຂອງພວກເຂົາເພື່ອຕັດສິນເຮົາຢູ່ສະເໝີ ແລະ ຊັ່ງຊາວຸດທິພາວະຂອງເຮົາໂດຍໃຊ້ບັນທັດຖານຂອງພວກເຂົາເອງ. ກັບມວນມະນຸດຊາດ, ນີ້ແມ່ນສິ່ງຍາກທີ່ສຸດໃນການຈັດການ ແລະ ມັນແມ່ນສິ່ງທີ່ເຮົາກຽດຊັງ ແລະ ລັງກຽດທີ່ສຸດ, ຕອນນີ້ເຈົ້າເຫັນບໍ? ເພາະວ່າ ນີ້ແມ່ນອຸປະນິໄສທີ່ສາມາດເຫັນໄດ້ທີ່ສຸດຂອງຊາຕານ. ຍິ່ງໄປກວ່ານັ້ນ, ວຸດທິພາວະຂອງພວກເຈົ້າກໍຕໍ່າຫຼາຍ, ສະນັ້ນ ພວກເຈົ້າຈຶ່ງຕົກຢູ່ໃນກົນອຸບາຍຂອງຊາຕານຕະຫຼອດເວລາ. ເຈົ້າພຽງແຕ່ບໍ່ສາມາດແຍກແຍະກົນອຸບາຍເຫຼົ່ານັ້ນໄດ້! ເຮົາໄດ້ບອກພວກເຈົ້າຫຼາຍຄັ້ງແລ້ວວ່າ ໃຫ້ລະມັດລະວັງຢູ່ຕະລອດເວລາ ແລະ ບໍ່ໃຫ້ຖືກຊາຕານລໍ້ລວງໃນທຸກຮູບແບບ. ແຕ່ພວກເຈົ້າກໍບໍ່ຟັງ ແລະ ພວກເຈົ້າເມີນເສີຍໃນສິ່ງທີ່ເຮົາໄດ້ກ່າວໂດຍບໍ່ມີການໄຕ່ຕອງ, ສະນັ້ນພວກເຈົ້າຈຶ່ງລົງເອີຍກັບການສູນເສຍຢ່າງທົນທຸກທໍລະມານໃນຊີວິດຂອງພວກເຈົ້າ ແລະຄວາມເສຍໃຈກໍຊ້າເກີນໄປ. ເຖິງຢ່າງໃດກໍຕາມ, ນີ້ຈະບໍ່ເປັນການດີບໍທີ່ເຈົ້າຈະນໍາເອົາສິ່ງນີ້ໄປເປັນບົດຮຽນສໍາລັບການສະແຫວງຫາໃນອະນາຄົດຂອງເຈົ້າບໍ? ເຮົາຂໍເວົ້າກັບເຈົ້າວ່າ ການມີຄວາມຄິດລົບຢ່າງງ່າຍດາຍຈະນໍາເອົາຄວາມສູນເສຍມາສູ່ຊີວິດຂອງເຈົ້າ ແລະ ມັນຈະຮ້າຍແຮງທີ່ສຸດ. ເມື່ອຮູ້ຈັກສິ່ງນີ້ແລ້ວ ບໍ່ແມ່ນເວລາທີ່ເຈົ້າຄວນຕື່ນຂຶ້ນແລ້ວບໍ?

ຜູ້ຄົນບໍ່ມີຄວາມອົດທົນຕໍ່ຜົນຕາມມາຢ່າງກະທັນຫັນ ແລະ ພວກເຂົາພຽງແຕ່ເຫັນສິ່ງທີ່ຖືກຕ້ອງທີ່ຢູ່ຕໍ່ໜ້າພວກເຂົາເທົ່ານັ້ນ. ເມື່ອເຮົາກ່າວວ່າ ເຮົາໄດ້ເລີ່ມລົງໂທດຄົນທີ່ມີອໍານາດ, ພວກເຈົ້າກໍຍິ່ງກັງວົນຫຼາຍຂຶ້ນ ແລະ ພວກເຈົ້າຖາມວ່າ "ເປັນຫຍັງຄົນເຫຼົ່ານັ້ນຈຶ່ງຍັງມີອໍານາດຢູ່? ນີ້ໝາຍຄວາມວ່າພຣະເຈົ້າບໍ່ໄດ້ກ່າວພຣະທໍາທີ່ວ່າງເປົ່າບໍ?" ແນວຄິດຂອງມະນຸດຊ່າງຕັ້ງໝັ້ນຫຼາຍ! ເຈົ້າບໍ່ເຂົ້າໃຈຄວາມໝາຍຂອງສິ່ງທີ່ເຮົາກ່າວເລີຍ. ຄົນທີ່ເຮົາລົງໂທດແມ່ນຄົນທີ່ຊົ່ວຮ້າຍ, ຄົນທີ່ທ້າທາຍເຮົາ, ຄົນທີ່ບໍ່ຮູ້ຈັກເຮົາ ແລະ ເຮົາບໍ່ສົນໃຈຄົນທີ່ເຊື່ອເຮົາຢ່າງດຽວ ແຕ່ບໍ່ສະແຫວງຫາຄວາມຈິງ. ເຈົ້າຊ່າງບໍ່ມີຄວາມຮູ້ຫຼາຍແທ້ໆ! ເຈົ້າບໍ່ເຂົ້າໃຈສິ່ງທີ່ເຮົາກ່າວເລີຍ! ເຖິງມັນຈະເປັນແບບນີ້, ເຈົ້າກໍຍັງຕົບຫຼັງຕົນເອງໂດຍຄິດວ່າເຈົ້າໄດ້ເປັນຜູ້ໃຫຍ່ແລ້ວ, ເຈົ້າເຂົ້າໃຈສິ່ງຕ່າງໆ ແລະ ເຈົ້າສາມາດເຂົ້າໃຈຄວາມປະສົງຂອງເຮົາ. ເຮົາກ່າວສະເໝີວ່າ ທຸກສິ່ງ ແລະ ທຸກເລື່ອງແມ່ນການບໍລິການແກ່ພຣະຄຣິດ, ແຕ່ເຈົ້າເຂົ້າໃຈພຣະທໍາເຫຼົ່ານີ້ຢ່າງແທ້ຈິງບໍ? ເຈົ້າຮູ້ຈັກຄວາມໝາຍຂອງພຣະທໍາເຫຼົ່ານີ້ແທ້ບໍ? ເຮົາໄດ້ກ່າວກ່ອນໜ້ານີ້ແລ້ວວ່າ ເຮົາບໍ່ລົງໂທດຄົນໃດໜຶ່ງໂດຍບໍ່ຮອບຄອບ. ທຸກຄົນໃນໂລກຈັກກະວານນີ້ປະຕິບັດຕາມ

ການຈັດແຈງທີ່ເໝາະສົມຂອງເຮົາ ນັ້ນກໍຄື ຄົນທີ່ເປັນເປົ້າໝາຍແຫ່ງການລົງໂທດຂອງເຮົາ, ຄົນທີ່ໃຫ້ບໍລິການແກ່ພຣະຄຣິດ (ເຮົາຈະບໍ່ຊ່ວຍຄົນເຫຼົ່ານີ້ໃຫ້ພົ້ນ), ຄົນທີ່ຖືກເຮົາເລືອກ ແລະ ຄົນທີ່ຖືກເຮົາເລືອກແຕ່ຈະຖືກໂຍນອອກໃນພາຍຫຼັງ, ເຮົາກໍາທຸກຄົນເຫຼົ່ານີ້ຢູ່ໃນມືຂອງເຮົາແລ້ວ ບໍ່ຮວມທັງເຈົ້າຜູ້ທີ່ເຮົາໄດ້ເລືອກ ແລະ ຜູ້ທີ່ເຮົາເຂົ້າໃຈຫຼາຍທີ່ສຸດ. ສິ່ງຕ່າງໆທີ່ເຮົາປະຕິບັດໃນໄລຍະນີ້ ແລະ ສິ່ງຕ່າງໆທີ່ເຮົາກະທໍາໃນໄລຍະຕໍ່ໄປ ລ້ວນແລ້ວແຕ່ເປັນການປະຕິບັດຕາມການຈັດແຈງທີ່ເຕັມໄປດ້ວຍສະຕິປັນຍາຂອງເຮົາ. ເຈົ້າບໍ່ຕ້ອງຈັດກຽມຫຍັງໃຫ້ເຮົາລ່ວງໜ້າ; ພຽງແຕ່ລໍຄອຍຄວາມເບີກບານຂອງເຈົ້າ! ນີ້ແມ່ນສິ່ງທີ່ເຈົ້າສົມຄວນໄດ້ຮັບ. ເຮົາຄວບຄຸມຢູ່ເໜືອທຸກສິ່ງທີ່ເປັນຂອງເຮົາ ແລະ ເຮົາຈະບໍ່ຖືເບົາຍົກເວັ້ນຄົນທີ່ກ້າຕໍ່ວ່າ ຫຼື ຄົນທີ່ກ້າສະແດງຄວາມຄິດເຫັນຕ່າງໆນາໆກ່ຽວກັບເຮົາ. ທຸກມື້ນີ້ ເຮົາມັກຈະໃຈຮ້າຍຂຶ້ນດ້ວຍຄວາມໂມໂຫ ຍ້ອນໂຄງການຂອງບົດບັນຍັດແຫ່ງການຄຸ້ມຄອງທີ່ເຮົາໄດ້ຈັດແຈງໄວ້ ໄດ້ຄືບໜ້າມາຮອດຂັ້ນຕອນນີ້. ຢ່າຄິດວ່າເຮົາບໍ່ມີຄວາມຮູ້ສຶກ. ຍ້ອນເຮົາໄດ້ກ່າວກ່ອນໜ້ານີ້ແລ້ວວ່າ ບໍ່ມີສິ່ງໃດ, ບໍ່ມີຄົນໃດ, ບໍ່ມີເຫດການໃດທີ່ກ້າຂັດຂວາງບາດກ້າວໄປຂ້າງໜ້າຂອງເຮົາໄດ້. ເຮົາເຮັດໃນສິ່ງທີ່ເຮົາເວົ້າ ແລະ ນີ້ແມ່ນສິ່ງທີ່ເຮົາເປັນ ແລະ ຍິ່ງໄປກວ່ານັ້ນ ມັນເປັນການສະແດງອອກທີ່ສາມາດເຫັນໄດ້ທີ່ສຸດຂອງອຸປະນິໄສຂອງເຮົາ. ເຮົາປະຕິບັດຕໍ່ທຸກຄົນແບບດຽວກັນ ເພາະວ່າພວກເຈົ້າທຸກຄົນລ້ວນແລ້ວແຕ່ເປັນລູກຊາຍຂອງເຮົາ ແລະ ເຮົາກໍຮັກພວກເຈົ້າທຸກຄົນ. ພໍ່ປະເພດໃດທີ່ຈະບໍ່ຮັບຜິດຊອບຕໍ່ຊີວິດຂອງລູກຊາຍຂອງຕົນ? ພໍ່ປະເພດໃດທີ່ຈະບໍ່ເຮັດວຽກໜັກທັງກາງເວັນ ແລະກາງຄືນເພື່ອອະນາຄົດຂອງລູກຊາຍຂອງຕົນ? ແລ້ວແມ່ນໃຜທ່າມກາງພວກເຈົ້າທີ່ສາມາດຮູ້ສິ່ງນີ້ໄດ້? ແມ່ນໃຜສາມາດເອົາໃຈໃສ່ຕໍ່ຫົວໃຈຂອງເຮົາໄດ້? ພວກເຈົ້າວາງແຜນ ແລະ ຈັດກຽມເພື່ອຄວາມພໍໃຈຂອງພວກເຈົ້າເອງຢູ່ເລື້ອຍໆ ແລະ ພວກເຈົ້າບໍ່ຄໍານຶງເຖິງຫົວໃຈຂອງເຮົາເລີຍ. ເຮົາກັງວົນໃຈກັບພວກເຈົ້າຈົນຫົວໃຈຂອງເຮົາແຕກສະຫຼາຍ, ແຕ່ພວກເຈົ້າກໍຍັງປາຖະໜາຄວາມສຸກທາງຮ່າງກາຍ, ກິນ ແລະ ດື່ມ, ນອນ ແລະ ວິທີທີ່ເຈົ້ານຸ່ງເຄື່ອງ, ພວກເຈົ້າບໍ່ມີຈິດສໍານຶກແມ່ນແຕ່ໜ້ອຍດຽວບໍ? ຖ້າເປັນແບບນີ້ແລ້ວ ພວກເຈົ້າກໍຖືວ່າເປັນສັດຮ້າຍໃນເຄື່ອງນຸ່ງຂອງມະນຸດ. ສິ່ງທີ່ເຮົາເວົ້າບໍ່ແມ່ນເກີນເຫດຜົນ ແລະ ພວກເຈົ້າຄວນອົດທົນກັບຄໍາເວົ້າເຫຼົ່ານີ້ໃຫ້ໄດ້. ນີ້ແມ່ນວິທີທີ່ດີທີ່ສຸດໃນການຊ່ວຍໃຫ້ພວກເຈົ້າລອດພົ້ນ ແລະ ຍິ່ງໄປກວ່ານັ້ນ ມັນເປັນບ່ອນທີ່ສະຕິປັນຍາຂອງເຮົາສະຖິດຢູ່ ເພື່ອໂຈມຕີຈຸດອ່ອນທີ່ສໍາຄັນຂອງຊາຕານ, ເພື່ອເອົາຊະນະມັນທັງໝົດ ແລະ ປ່ອຍໃຫ້ມັນຖືກທໍາລາຍໂດຍສົມບູນ. ຕາບໃດທີ່ເຈົ້າກັບໃຈ ແລະ ໝັ້ນໃຈວ່າ ເຈົ້າສາມາດເພິ່ງພາເຮົາເພື່ອກໍາຈັດທໍາມະຊາດດັ້ງເດີມຂອງເຈົ້າ ແລະດໍາລົງຊີວິດຕາມພາບລັກສະນະຂອງຄົນໃໝ່, ຫົວໃຈຂອງເຮົາຈຶ່ງຈະພໍໃຈຢ່າງແທ້ຈິງ, ຍ້ອນວ່ານີ້ແມ່ນການດໍາລົງຊີວິດຕາມຄວາມເປັນມະນຸດທໍາມະດາ ແລະການເປັນພະຍານເຖິງພຣະນາມຂອງເຮົາ. ມັນເປັນສິ່ງທີ່ເຮັດໃຫ້ເຮົາມີຄວາມສຸກທີ່ສຸດ.

ເຈົ້າຕ້ອງຢູ່ໃກ້ຊິດເຮົາຢູ່ສະເໝີ. ມັນສາມາດເຫັນໄດ້ວ່າ ບາດກ້າວຢ່າງຂອງເຮົານັ້ນໄວຂຶ້ນໃນແຕ່ລະມື້. ຖ້າເຈົ້າຂາດການສົນທະນາຝ່າຍວິນຍານຊົ່ວໄລຍະໜຶ່ງ, ແລ້ວເຈົ້າກໍຈະຖືກເຮົາພິພາກສາໂດຍທັນທີ. ໃນຈຸດນີ້ ເຈົ້າຈະມີຄວາມເຂົ້າໃຈຢ່າງເລິກເຊິ່ງ. ເຮົາຕີສອນເຈົ້າ ບໍ່ແມ່ນຍ້ອນວ່າ ເຮົາບໍ່

ຮັກເຈົ້າ, ກົງກັນຂ້າມ ເຮົາລົງວິໄນເຈົ້າກໍຍ້ອນຄວາມຮັກທີ່ມີໃຫ້ກັບເຈົ້າ. ບໍ່ດັ່ງນັ້ນ ເຈົ້າຈະບໍ່ເຕີບໃຫຍ່ ແລະ ເຈົ້າກໍຈະເປັນຄົນໄຮ້ສິນທຳຢູ່ຕະຫຼອດເວລາໂດຍປາສະຈາກການຄວບຄຸມຂອງພຣະວິນຍານບໍລິສຸດ. ສິ່ງນີ້ສະແດງໃຫ້ເຫັນສະຕິປັນຍາຂອງເຮົາຕື່ມອີກ.

# ບົດທີ 62

ການເຂົ້າໃຈຄວາມປະສົງຂອງເຮົາບໍ່ແມ່ນພຽງເພື່ອໃຫ້ເຈົ້າຮູ້ຈັກເທົ່ານັ້ນ ແຕ່ຍັງເພື່ອໃຫ້ເຈົ້າປະຕິບັດຕາມຄວາມປະສົງຂອງເຮົາ. ຜູ້ຄົນກໍ່ພຽງບໍ່ເຂົ້າໃຈຫົວໃຈຂອງເຮົາ. ເມື່ອເຮົາເວົ້າວ່າ ນີ້ແມ່ນທິດຕາເວັນອອກ, ພວກເຂົາບໍ່ສາມາດເຂົ້າໃຈໄດ້ແຕ່ຄິດຢ່າງໜັກໂດຍນຶກສົງໄສວ່າ "ມັນແມ່ນທິດຕາເວັນອອກແທ້ບໍ? ບາງເທື່ອ ມັນບໍ່ແມ່ນ. ຂ້ານ້ອຍບໍ່ສາມາດເຊື່ອງ່າຍໆແບບນັ້ນ. ຂ້ານ້ອຍຕ້ອງເຫັນມັນດ້ວຍຕົນເອງ". ເວົ້າກັບພວກເຈົ້ານີ້ຈັ່ງແມ່ນຍາກຫຼາຍ ແລະ ພວກເຈົ້າບໍ່ຮູ້ຈັກວ່າ ຄວາມອ່ອນນ້ອມທີ່ແທ້ຈິງແມ່ນຫຍັງ. ເມື່ອເຈົ້າຮູ້ຈັກຄວາມປະສົງຂອງເຮົາແລ້ວ ຈົ່ງໄປເຮັດມັນໂດຍບໍ່ຕ້ອງລັງເລໃຈ, ບໍ່ຈຳເປັນຕ້ອງຄິດກ່ຽວກັບສິ່ງນັ້ນອີກ! ເຈົ້າພິຈາລະນາສິ່ງທີ່ເຮົາກ່າວດ້ວຍຄວາມສົງໄສ ແລະ ເຈົ້າມີວິທີການທີ່ໂງ່ໃນການຍອມຮັບມັນ, ແລ້ວເຈົ້າຈະມີຄວາມເຂົ້າໃຈທີ່ແທ້ຈິງໄດ້ແນວໃດ? ເຈົ້າບໍ່ເຄີຍເຂົ້າສູ່ພຣະທຳຂອງເຮົາ. ດັ່ງທີ່ເຮົາໄດ້ກ່າວຜ່ານມາ, ຄົນທີ່ເຮົາຕ້ອງການແມ່ນຄົນທີ່ດີເລີດ, ບໍ່ແມ່ນຄົນຈຳນວນຫຼວງຫຼາຍ. ຄົນທີ່ບໍ່ໃຫ້ຄວາມສຳຄັນກັບການເຂົ້າສູ່ພຣະທຳຂອງເຮົາ ແມ່ນບໍ່ສົມຄວນທີ່ຈະເປັນທະຫານທີ່ດີຂອງພຣະຄຣິດ, ແຕ່ກົງກັນຂ້າມ ພວກເຂົາປະພຶດຕົວຄືກັບຂີ້ຂ້າຂອງຊາຕານ ແລະ ຂັດຂວາງພາລະກິດຂອງເຮົາ. ຢ່າຄິດວ່ານີ້ແມ່ນເລື່ອງເລັກນ້ອຍ. ໃຜກໍຕາມທີ່ຂັດຂວາງພາລະກິດຂອງເຮົາ ຄົນນັ້ນແມ່ນລະເມີດກົດບັນຍັດແຫ່ງການບໍລິຫານຂອງເຮົາ ແລະ ແນ່ນອນທີ່ສຸດ ເຮົາຈະລົງວິໄນພວກເຂົາຢ່າງໜັກ. ໝາຍຄວາມວ່າ ຕັ້ງແຕ່ນີ້ເປັນຕົ້ນໄປ ຖ້າເຈົ້າໜີອອກຈາກເຮົາເປັນເວລາໃດໜຶ່ງ ແລ້ວການພິພາກສາຂອງເຮົາກໍຈະເກີດຂຶ້ນກັບເຈົ້າທັນທີ. ຖ້າເຈົ້າບໍ່ເຊື່ອພຣະທຳຂອງເຮົາ ກໍຈົ່ງເບິ່ງດ້ວຍຕົວເຈົ້າເອງ, ເພື່ອຈະໄດ້ເຫັນວ່າສະພາບຂອງເຈົ້າເປັນແນວໃດເມື່ອດຳລົງຊີວິດຢູ່ໃນແສງສະຫວ່າງແຫ່ງໃບໜ້າຂອງເຮົາ ແລະ ສະພາບຂອງເຈົ້າຈະເປັນແນວໃດ ເມື່ອເຈົ້າຈາກເຮົາໄປ.

ເຮົາບໍ່ໄດ້ຢ້ານວ່າເຈົ້າຈະບໍ່ດຳລົງຊີວິດໃນຝ່າຍວິນຍານ. ພາລະກິດຂອງເຮົາໄດ້ສືບຕໍ່ຈົນເຖິງຂັ້ນຕອນປັດຈຸບັນ, ແລ້ວເຈົ້າຈະສາມາດເຮັດຫຍັງໄດ້? ເຮົາເຮັດສິ່ງຕ່າງໆຕາມຂັ້ນຕອນ, ສະນັ້ນ ເຈົ້າບໍ່ຈຳເປັນຕ້ອງກັງວົນ. ເຮົາຈະປະຕິບັດພາລະກິດຂອງເຮົາດ້ວຍຕົນເອງ. ທັນທີທີ່ເຮົາລົງມືປະຕິບັດທຸກຄົນກໍເຊື່ອໝົດ, ບໍ່ດັ່ງນັ້ນ ເຮົາຈະຈັດການກັບພວກເຂົາໂດຍການຂ້ຽນຕີພວກເຂົາຢ່າງຮ້າຍແຮງຍິ່ງຂຶ້ນ. ສິ່ງນີ້ຍິ່ງກ່ຽວພັນເຖິງບົດບັນຍັດແຫ່ງການບໍລິຫານຂອງເຮົາ. ສາມາດເຫັນໄດ້ວ່າ ບັດນີ້ບົດບັນຍັດແຫ່ງການບໍລິຫານຂອງເຮົາໄດ້ເລີ່ມປະກາດໃຊ້ ແລະ ນຳໃຊ້ແລ້ວ ໂດຍບໍ່ໄດ້ລີ້ລັບອີກຕໍ່ໄປ. ເຈົ້າຕ້ອງເຫັນສິ່ງນີ້ຢ່າງຊັດເຈນ! ບັດນີ້ທຸກຢ່າງແມ່ນກ່ຽວພັນກັບບົດບັນຍັດແຫ່ງການບໍລິຫານຂອງເຮົາ ແລະ ໃຜກໍຕາມທີ່ລະເມີດມັນ ກໍຕ້ອງໄດ້ຮັບການສູນເສຍ. ສິ່ງນີ້ບໍ່ແມ່ນບັນຫາເລັກນ້ອຍຢ່າງແນ່ນອນ. ພວກເຈົ້າມີຄວາມເຂົ້າໃຈໃນສິ່ງນີ້ແທ້ບໍ? ພວກເຈົ້າເຫັນສິ່ງນີ້ຢ່າງກະຈ່າງແຈ້ງບໍ? ບັດນີ້ເຮົາເລີ່ມສົນທະນາວ່າ ບັນດາປະຊາຊາດ ແລະ ທຸກຄົນທີ່ຢູ່ເທິງແຜ່ນດິນໂລກຖືກປົກຄອງພາຍໃນກຳມືຂອງເຮົາ ແລະ ບໍ່ວ່າສາສະໜາຂອງພວກເຂົາແມ່ນຫຍັງກໍຕາມ ທຸກຄົນຕ້ອງຫຼັ່ງໄຫຼມາສູ່ບັນລັງຂອງເຮົາ. ແນ່ນອນ, ບາງຄົນທີ່ໄດ້ຮັບການພິພາກສາຈະຖືກໂຍນລົງສູ່ຂຸມເລິກທີ່ຢັ່ງບໍ່ເຖິງ (ພວກເຂົາຄືເປົ້າໝາຍ

ສຳລັບການທຳລາຍທີ່ຈະຖືກເຜົາໄໝ້ທັງໝົດ ແລະ ຈະບໍ່ມີຢູ່ອີກຕໍ່ໄປ) ແລະ ບາງຄົນທີ່ຮັບເອົານາມຂອງເຮົາຫຼັງຈາກຖືກພິພາກສາກໍຈະກາຍມາເປັນປະຊາຊົນແຫ່ງອານາຈັກຂອງເຮົາ (ພວກເຂົາຈະມີຄວາມສຸກເປັນເວລາ 1.000 ປີເທົ່ານັ້ນ). ພວກເຈົ້າເຫຼົ່ານັ້ນຈະເປັນກະສັດຮ່ວມກັບເຮົາຕະຫຼອດໄປ ແລະ ຍ້ອນພວກເຈົ້າທົນທຸກເພື່ອເຮົາກ່ອນໜ້ານີ້, ເຮົາຈະທົດແທນຄວາມທົນທຸກຂອງພວກເຈົ້າດ້ວຍພອນທີ່ເຮົາຈະປະທານໃຫ້ກັບພວກເຈົ້າຢ່າງບໍ່ໝົດສິ້ນ; ປະຊາຊົນເຫຼົ່ານັ້ນຂອງເຮົາຈະສະໜອງການຮັບໃຊ້ບໍລິການໃຫ້ກັບພຣະຄຣິດເທົ່ານັ້ນ. ສິ່ງທີ່ເອີ້ນວ່າຄວາມເພີດເພີນບໍ່ໄດ້ໝາຍເຖິງຄວາມສຸກເທົ່ານັ້ນ, ແຕ່ກົງກັນຂ້າມ ຄົນເຫຼົ່ານີ້ຖືກປົກປ້ອງບໍ່ໃຫ້ທົນທຸກຕໍ່ໄພພິບັດຕ່າງໆ. ນີ້ຄືຄວາມໝາຍພາຍໃນຂອງເງື່ອນໄຂທີ່ເຮົາຮຽກຮ້ອງຈາກເຈົ້າໃນຕອນນີ້ນັ້ນເຄັ່ງຄັດຫຼາຍ ແລະ ທຸກສິ່ງແຕະຕ້ອງເຖິງບົດບັນຍັດແຫ່ງການບໍລິຫານຂອງເຮົາ. ເພາະວ່າ ຖ້າພວກເຈົ້າບໍ່ຍອມຮັບການຝຶກຝົນຂອງເຮົາ ແລ້ວກໍບໍ່ມີທາງທີ່ເຮົາຈະມອບສິ່ງທີ່ພວກເຈົ້າຄວນຈະໄດ້ຮັບໃຫ້ກັບພວກເຈົ້າ. ເຖິງແມ່ນສິ່ງນີ້ເປັນຄວາມຈິງ, ພວກເຈົ້າຍັງຢ້ານທີ່ຈະທົນທຸກ, ຢ້ານທີ່ຈະເກີດມີບາດແຜໃນວິນຍານຂອງເຈົ້າ, ຄິດເຖິງເນື້ອໜັງຢູ່ສະເໝີ, ຈັດແຈງ ແລະ ວາງແຜນເພື່ອຕົນເອງຢູ່ສະເໝີ. ເຮົາບໍ່ໄດ້ຈັດແຈງສຳລັບພວກເຈົ້າຢ່າງເໝາະສົມບໍ? ແລ້ວເປັນຫຍັງເຈົ້າຈຶ່ງສືບຕໍ່ຈັດແຈງສຳລັບຕົນເອງຊໍ້າແລ້ວຊໍ້າອີກ? ເຈົ້າປະນາມເຮົາ! ບໍ່ແມ່ນແບບນັ້ນບໍ? ເຮົາຈັດແຈງບາງສິ່ງສຳລັບເຈົ້າ ແຕ່ເຈົ້າກໍປະຕິເສດມັນທັງສິ້ນ ແລະ ວາງແຜນຂອງເຈົ້າເອງ.

ພວກເຈົ້າອາດເວົ້າໄດ້ດີ, ແຕ່ໃນຄວາມເປັນຈິງແລ້ວ ພວກເຈົ້າບໍ່ສັງເກດຄວາມປະສົງຂອງເຮົາບໍ່ວ່າຫຍັງກໍຕາມ. ຈົ່ງຟັງເຮົາໃຫ້ດີ ເຮົາຈະບໍ່ເວົ້າຢ່າງແນ່ນອນວ່າ ມີຄົນຢູ່ທ່າມກາງພວກເຈົ້າທີ່ສາມາດຄຳນຶງເຖິງຄວາມປະສົງຂອງເຮົາຢ່າງແທ້ຈິງ. ເຖິງແມ່ນການກະທຳຂອງເຈົ້າອາດສອດຄ່ອງກັບຄວາມປະສົງຂອງເຮົາ, ເຮົາຈະບໍ່ສັນລະເສີນເຈົ້າຢ່າງແນ່ນອນ. ນີ້ແມ່ນວິທີການແຫ່ງຄວາມລອດພົ້ນຂອງເຮົາ. ເຖິງສິ່ງນີ້ເປັນຄວາມຈິງ, ພວກເຈົ້າກໍຍັງພໍໃຈໃນຕົນເອງເປັນບາງຄັ້ງ ໂດຍຄິດວ່າຕົນເອງມະຫັດສະຈັນແລ້ວກໍດູຖູກຄົນອື່ນ. ນີ້ແມ່ນລັກສະນະໜຶ່ງໃນອຸປະນິໄສທີ່ເສື່ອມຊາມຂອງມະນຸດ. ພວກເຈົ້າທຸກຄົນຮັບຮູ້ເຖິງເລື່ອງທີ່ເຮົາກ່າວ, ແຕ່ພຽງຢູ່ໃນລະດັບຜິວເຜີນເທົ່ານັ້ນ. ຖ້າຕ້ອງການປ່ຽນແປງຢ່າງແທ້ຈິງເຈົ້າຕ້ອງຫຍັບເຂົ້າໃກ້ເຮົາ; ສົນທະນາກັບເຮົາ ແລະ ເຮົາຈະປະທານຄວາມກະລຸນາໃຫ້ກັບເຈົ້າ. ບາງຄົນຄິດທີ່ຈະນັ່ງຢູ່ລ້າໆ ແລະ ເກັບກ່ຽວສິ່ງທີ່ຄົນອື່ນຫວ່ານ ໂດຍຮູ້ສຶກວ່າພວກເຂົາພຽງແຕ່ຕ້ອງເດ່ມືຂໍ ຫຼື ອ້າປາກກິນ, ເຖິງກັບລໍຖ້າໃຫ້ຄົນອື່ນຫຍ້ຳອາຫານຍັດໃສ່ປາກໃຫ້ພວກເຂົາກ່ອນທີ່ພວກເຂົາຈະເຕັມໃຈກືນມັນ. ຄົນປະເພດນີ້ເປັນຄົນໂງ່ຈ້າທີ່ສຸດ, ຢາກກິນສິ່ງທີ່ຄົນອື່ນໄດ້ຫຍ້ຳແລ້ວ ແລະ ນີ້ແມ່ນການສະແດງໃຫ້ເຫັນດ້ານຂີ້ຄ້ານທີ່ສຸດຂອງມະນຸດ. ເມື່ອໄດ້ຍິນພຣະທຳເຫຼົ່ານີ້ຂອງເຮົາແລ້ວ, ເຈົ້າກໍບໍ່ຕ້ອງເບິ່ງຂ້າມອີກຕໍ່ໄປ. ການເອົາໃຈໃສ່ເປັນສອງເທົ່າແມ່ນເປັນວິທີທີ່ຖືກຕ້ອງທີ່ເຈົ້າຕ້ອງເຮັດ. ເມື່ອນັ້ນເຈົ້າຈຶ່ງຈະປະຕິບັດຕາມຄວາມປະສົງຂອງເຮົາ. ນີ້ແມ່ນປະເພດຄວາມອ່ອນນ້ອມ ແລະ ການເຊື່ອຟັງທີ່ດີທີ່ສຸດ.

# ບົດທີ 63

ເຈົ້າຕ້ອງເຂົ້າໃຈສະພາບການຂອງເຈົ້າເອງ ແລະ ຍິ່ງໄປກວ່ານັ້ນ ຈົ່ງຊັດເຈນໃນເສັ້ນທາງທີ່ເຈົ້າຕ້ອງຍ່າງ; ຢ່າລໍຖ້າໃຫ້ເຮົາດຶງຫູເຈົ້າຂຶ້ນ ແລະ ຊີ້ສິ່ງຕ່າງໆໃຫ້ກັບເຈົ້າອີກຕໍ່ໄປເລີຍ. ເຮົາເປັນພຣະເຈົ້າຜູ້ທີ່ສັງເກດສ່ວນເລິກສຸດໃນຫົວໃຈຂອງມະນຸດ ແລະ ເຮົາຮູ້ຈັກຄວາມຄິດ ແລະ ແນວຄິດທຸກຢ່າງຂອງເຈົ້າ. ຍິ່ງໄປກວ່ານັ້ນ ເຮົາເຂົ້າໃຈການກະທຳ ແລະ ການປະພຶດຂອງເຈົ້າ ແຕ່ສິ່ງເຫຼົ່ານີ້ທັງໝົດມີສັນຍາຂອງເຮົາບໍ? ສິ່ງເຫຼົ່ານັ້ນທັງໝົດມີຄວາມປະສົງຂອງເຮົາບໍ? ຕາມຈິງແລ້ວ ເຈົ້າເຄີຍສະແຫວງຫາໄດ້ຊອກຫາສິ່ງເຫຼົ່ານີ້ມາກ່ອນບໍ? ເຈົ້າໄດ້ໃຊ້ເວລາໃນເລື່ອງນີ້ແທ້ບໍ? ເຈົ້າໄດ້ພະຍາຍາມຢ່າງແທ້ຈິງແລ້ວບໍ? ເຮົາບໍ່ໄດ້ກຳລັງວິຈານເຈົ້າ; ເຈົ້າພຽງແຕ່ໄດ້ບໍ່ໃສ່ໃຈໃນເລື່ອງນີ້ເທົ່ານັ້ນ! ເຈົ້າສັບສົນຫຼາຍຢູ່ສະເໝີ ແລະ ບໍ່ສາມາດເຫັນສິ່ງຕ່າງໆຢ່າງຊັດເຈນ. ເຈົ້າຮູ້ບໍວ່າ ແມ່ນຫຍັງຄືຕົ້ນເຫດຂອງສິ່ງນີ້? ຄືວ່າຄວາມຄິດຂອງພວກເຈົ້າບໍ່ຊັດເຈນ ແລະ ແນວຄິດຂອງພວກເຈົ້າຝັງເລິກຢ່າງຕິດແໜ້ນເກີນໄປ; ຍິ່ງໄປກວ່ານັ້ນ ເຈົ້າບໍ່ໃສ່ໃຈຄວາມປະສົງຂອງເຮົາ. ບາງຄົນຈະອ້າງວ່າ "ພຣະອົງກ່າວວ່າ ພວກຂ້ານ້ອຍບໍ່ສົນໃຈຄວາມປະສົງຂອງພຣະອົງໄດ້ແນວໃດ? ພວກຂ້ານ້ອຍພະຍາຍາມເຂົ້າໃຈຄວາມປະສົງຂອງພຣະອົງຢ່າງສະໝໍ່າສະເໝີ, ແຕ່ພວກຂ້ານ້ອຍບໍ່ເຄີຍເຂົ້າປະສົບຜົນສຳເລັດ ແລ້ວພວກຂ້ານ້ອຍຄວນຈະເຮັດແນວໃດ? ພຣະອົງຈະເວົ້າແທ້ບໍວ່າ ພວກຂ້ານ້ອຍບໍ່ໄດ້ພະຍາຍາມ?" ໃຫ້ເຮົາຖາມເຈົ້າວ່າ ເຈົ້າກ້າທີ່ຈະອ້າງວ່າເຈົ້າຊື່ສັດຕໍ່ເຮົາແທ້ບໍ? ແລ້ວແມ່ນໃຜກ້າເວົ້າວ່າ ພວກເຂົາຖວາຍຕົນເອງໃຫ້ກັບເຮົາຢ່າງຊື່ສັດແທ້ຈິງ? ເຮົາຢ້ານວ່າ ບໍ່ມີໃຜທ່າມກາງພວກເຈົ້າທີ່ສາມາດເວົ້າແບບນີ້ໄດ້ ບໍ່ຈຳເປັນຕ້ອງໃຫ້ເຮົາເວົ້າກໍໄດ້ ນັ້ນກໍເພາະວ່າ ພວກເຈົ້າແຕ່ລະຄົນມີທາງເລືອກຂອງພວກເຈົ້າເອງ, ຄວາມມັກຂອງພວກເຈົ້າເອງ ແລະ ຍິ່ງໄປກວ່ານັ້ນ ພວກເຈົ້າມີເຈດຕະນາຂອງພວກເຈົ້າເອງ. ຢ່າຫຼອກລວງເລີຍ! ເຮົາມີຄວາມເຂົ້າໃຈກ່ຽວກັບຄວາມຄິດທີ່ຢູ່ເລິກສຸດຂອງພວກເຈົ້າຢ່າງລະອຽດແຕ່ດົນນານແລ້ວ. ເຮົາຍັງຕ້ອງໄດ້ອະທິບາຍສິ່ງນີ້ອີກບໍ? ເຈົ້າຕ້ອງກວດສອບຈາກທຸກດ້ານຫຼາຍຂຶ້ນ (ຄວາມຄິດ ແລະ ແນວຄິດຂອງເຈົ້າ, ທຸກສິ່ງທີ່ເຈົ້າເວົ້າ, ທຸກຄຳເວົ້າ, ທຸກເຈດຕະນາ ແລະ ແຮງຜັກດັນທີ່ຢູ່ເບື້ອງຫຼັງທຸກການເຄື່ອນໄຫວຂອງເຈົ້າ); ດ້ວຍວິທີນີ້ ເຈົ້າຈະບັນລຸການເຂົ້າສູ່ໃນທຸກດ້ານ. ຍິ່ງໄປກວ່ານັ້ນ, ເຈົ້າຈະສາມາດປະກອບຕົນເອງດ້ວຍຄວາມຈິງຢ່າງບໍລິບູນ.

ຖ້າເຮົາບໍ່ບອກສິ່ງດັ່ງກ່າວແກ່ພວກເຈົ້າ ພວກເຈົ້າກໍຈະຍັງສັບສົນຢູ່, ປາຖະໜາຄວາມສຸກທາງເນື້ອໜັງຢູ່ໝົດມື້ໝົດເວັນ ແລະ ບໍ່ປາຖະໜາທີ່ຈະສົນໃຈຄວາມປະສົງຂອງເຮົາເລີຍ. ເຮົາກຳລັງໃຊ້ມືແຫ່ງຄວາມຮັກຂອງເຮົາເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນຢ່າງສະໝໍ່າສະເໝີ. ພວກເຈົ້າຮູ້ບໍ? ພວກເຈົ້າໄດ້ເຂົ້າໃຈເຖິງຄວາມຈິງນີ້ແລ້ວບໍ? ເຮົາຮັກເຈົ້າຢ່າງຈິງໃຈ. ເຈົ້າກ້າທີ່ຈະເວົ້າວ່າ ເຈົ້າຮັກເຮົາຢ່າງຈິງໃຈບໍ? ໃຫ້ຖາມຕົນເອງເລື້ອຍໆເບິ່ງວ່າ ເຈົ້າສາມາດມາຢູ່ຕໍ່ໜ້າເຮົາເພື່ອຍອມຕໍ່ການກວດສອບຂອງເຮົາໃນການກະທຳທຸກຢ່າງຂອງເຈົ້າແທ້ບໍ? ເຈົ້າຍອມໃຫ້ເຮົາກວດສອບການກະທຳທຸກຢ່າງຂອງເຈົ້າແທ້ບໍ? ເຮົາເວົ້າວ່າ ເຈົ້າເສື່ອມຊາມ ແລະ ເຈົ້າກໍຟ້າວປອງກັນຕົວເອງທັນທີ. ການພິພາກສາຂອງເຮົາ

ມາເຖິງເຈົ້າແລ້ວ; ບັດນີ້ ເຈົ້າຄວນຕື່ນຂຶ້ນສູ່ຄວາມຈິງ! ທຸກສິ່ງທີ່ເຮົາກ່າວແມ່ນຄວາມຈິງ; ພຣະທຳຂອງເຮົາຊີ້ໃຫ້ເຫັນສະພາບການຕົວຈິງທີ່ຢູ່ພາຍໃນເຈົ້າ. ໂອ້ ມະນຸດຊາດເອີຍ! ເຈົ້າຊ່າງຈັດການຍາກແທ້ໆ. ມີພຽງແຕ່ເມື່ອເຮົາຊີ້ໃຫ້ເຫັນເຖິງສະພາບການຕົວຈິງຂອງພວກເຈົ້າ, ພວກເຈົ້າຈຶ່ງຍອມຮັບສິ່ງທີ່ເຮົາເວົ້າຢ່າງສຸດຫົວໃຈ. ຖ້າເຮົາບໍ່ເຮັດແບບນີ້, ແລ້ວພວກເຈົ້າກໍຈະຍຶດຕິດກັບແນວຄິດທີ່ຫຼ້າສະໄໝຂອງພວກເຈົ້າ ແລະ ຍຶດຕິດກັບວິທີການຄິດຂອງພວກເຈົ້າ ໂດຍສົມມຸດວ່າ ບໍ່ມີໃຜເທິງແຜ່ນດິນໂລກທີ່ສະຫຼາດກວ່າພວກເຈົ້າ. ໃນເລື່ອງນີ້ ບໍ່ແມ່ນພຽງແຕ່ການທີ່ເຈົ້າຖືວ່າຕົນເອງຊອບທຳບໍ? ບໍ່ແມ່ນເຈົ້າໝົກມຸ້ນກັບການເຮັດໃຫ້ຕົນເອງພໍໃຈ ແລະ ຄວາມພໍໃຈໃນຕົນເອງ ແລະ ການອວດດີ ແລະ ການຫຼອກລວງບໍ? ໃນຕອນນີ້ ເຈົ້າຄວນເຂົ້າໃຈສິ່ງນີ້ໄດ້ແລ້ວ! ເຈົ້າບໍ່ຄວນຄິດວ່າຕົນເອງສະຫຼາດ ຫຼື ພິເສດ; ກົງຂັນຂ້າມ ເຈົ້າຕ້ອງຮູ້ເຖິງຂໍ້ບົກຜ່ອງ ແລະ ຈຸດອ່ອນຂອງເຈົ້າເອງຢ່າງສະໝໍ່າສະເໝີ. ໃນວິທີນີ້, ຄວາມຕັ້ງໃຈຂອງເຈົ້າທີ່ຈະຮັກເຮົາຈຶ່ງບໍ່ຫາຍໄປ ແລະ ຈະຍິ່ງໜັກແໜ້ນຂຶ້ນເລື້ອຍໆ ແລະ ສະພາບການຂອງເຈົ້າເອງກໍຈະຍິ່ງສືບຕໍ່ປັບປຸງໃຫ້ດີຂຶ້ນ. ສຳຄັນໄປກວ່ານັ້ນ ຊີວິດຂອງເຈົ້າຈະກ້າວໜ້າຫຼາຍຂຶ້ນໃນແຕ່ລະມື້.

ເມື່ອເຈົ້າໄດ້ມາເຂົ້າໃຈຄວາມປະສົງຂອງເຮົາ ເຈົ້າກໍຈະມາຮູ້ຈັກຕົນເອງ, ດ້ວຍເຫດນັ້ນການໄດ້ຮັບຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບເຮົາ ແລະ ພັດທະນາຄວາມໝັ້ນໃຈທີ່ເຈົ້າມີກ່ຽວກັບເຮົາຫຼາຍຂຶ້ນ. ປັດຈຸບັນນີ້, ຖ້າຄົນໃດບໍ່ສາມາດມີຄວາມໝັ້ນໃຈໃນຕົວເຮົາເກົ້າສິບເປີເຊັນ, ແຕ່ກົງກັນຂ້າມ ກັບສືບຕໍ່ຂຶ້ນໆລົງໆທຸກນາທີ, ບຶດຮ້ອນບຶດໜາວ, ແລ້ວເຮົາກໍຈະເວົ້າວ່າ ບຸກຄົນນັ້ນແມ່ນຄົນທີ່ຈະຖືກປະຖິ້ມຢ່າງແນ່ນອນ. ສິບເປີເຊັນທີ່ເຫຼືອແມ່ນຂຶ້ນຢູ່ກັບແສງສະຫວ່າງ ແລະ ແສງເຍືອງທາງຂອງເຮົາໂດຍສິ້ນເຊີງ; ດ້ວຍສິ່ງເຫຼົ່ານີ້, ຜູ້ຄົນຈຶ່ງສາມາດມີຄວາມໝັ້ນໃຈໃນຕົວເຮົາໜຶ່ງຮ້ອຍເປີເຊັນ. ໃນຕອນນີ້ ເຊິ່ງໝາຍເຖິງໃນປັດຈຸບັນນີ້ ມີເທົ່າໃດຄົນທີ່ສາມາດບັນລຸວຸດທິພາວະປະເພດນີ້ໄດ້? ເຮົາເປີດເຜີຍຄວາມປະສົງຂອງເຮົາໃຫ້ກັບເຈົ້າຢ່າງສະໝໍ່າສະເໝີ ແລະ ຄວາມຮູ້ສຶກແຫ່ງຊີວິດກໍໄຫຼວຽນຢູ່ໃນຕົວເຈົ້າຢ່າງຕໍ່ເນື່ອງ, ແລ້ວເປັນຫຍັງເຈົ້າຈຶ່ງບໍ່ປະຕິບັດໃຫ້ສອດຄ່ອງກັບພຣະວິນຍານ? ເຈົ້າຢ້ານເຮັດຫຍັງຜິດບໍ? ຖ້າເປັນແບບນັ້ນ, ເປັນຫຍັງເຈົ້າຈຶ່ງບໍ່ໃສ່ໃຈກັບການຝຶກຝົນ? ເຮົາໄດ້ກ່າວກັບເຈົ້າວ່າ ຄົນນັ້ນບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາພຽງແຕ່ດ້ວຍການພະຍາຍາມພຽງແຕ່ໜຶ່ງຄັ້ງ ຫຼື ສອງຄັ້ງ; ພວກເຂົາຕ້ອງຜ່ານຂະບວນການໃດໜຶ່ງ. ເຮົາໄດ້ຊີ້ໃຫ້ເຫັນສິ່ງນີ້ຫຼາຍຄັ້ງ, ແລ້ວເປັນຫຍັງເຈົ້າຈຶ່ງຍັງບໍ່ນຳມັນເຂົ້າສູ່ການປະຕິບັດ? ເຈົ້າບໍ່ຄິດບໍວ່າເຈົ້າກຳລັງບໍ່ເຊື່ອຟັງບໍ? ເຈົ້າປາຖະໜາທີ່ຈະເຮັດໃຫ້ທຸກສິ່ງສຳເລັດທັນທີ ແລະ ບໍ່ເຕັມໃຈທີ່ຈະພະຍາຍາມ ຫຼື ໃຊ້ເວລາກັບສິ່ງໃດເລີຍ. ເຈົ້າຊ່າງໂງ່ຈ້າ ແລະ ຍິ່ງໄປກວ່ານັ້ນ ເຈົ້າແມ່ນບໍ່ມີຄວາມຮູ້ຫຍັງເລີຍ!

ພວກເຈົ້າບໍ່ຮູ້ສຶກຕົວບໍວ່າ ເຮົາກຳລັງເວົ້າກ່ຽວກັບສິ່ງຕ່າງໆຢູ່ສະເໝີໂດຍບໍ່ເວົ້າອ້ອມຄ້ອມ? ເປັນຫຍັງພວກເຈົ້າຈຶ່ງສືບຕໍ່ໂງ່, ມຶນຊາ ແລະ ຈ້າ? ພວກເຈົ້າຄວນກວດສອບຕົນເອງໃຫ້ຫຼາຍຂຶ້ນ ແລະ ຖ້າມີຫຍັງທີ່ພວກເຈົ້າບໍ່ເຂົ້າໃຈ ພວກເຈົ້າກໍຄວນມາຢູ່ຕໍ່ໜ້າເຮົາໃຫ້ຫຼາຍຍິ່ງຂຶ້ນ. ເຮົາຂໍບອກເຈົ້າດັ່ງນີ້ວ່າ ເຫດຜົນທີ່ເຮົາເວົ້າແບບນີ້ ຫຼື ແບບນັ້ນກໍເພື່ອນຳພາພວກເຈົ້າມາຢູ່ຕໍ່ໜ້າເຮົາ. ຫຼັງຈາກໃຊ້ເວລາຫຼາຍປີ

ແລ້ວເປັນຫຍັງພວກເຈົ້າຈຶ່ງຍັງບໍ່ເຂົ້າໃຈສິ່ງນີ້? ມັນເປັນຍ້ອນພຣະທຳຂອງເຮົາໄດ້ເຮັດໃຫ້ພວກເຈົ້າສັບສົນຢ່າງສົມບູນບໍ? ຫຼື ເປັນຍ້ອນວ່າພວກເຈົ້າບໍ່ໄດ້ຈິງຈັງກັບພຣະທຳຂອງເຮົາແຕ່ລະຄຳເລີຍ? ເມື່ອພວກເຈົ້າອ່ານພຣະທຳເຫຼົ່ານັ້ນ, ພວກເຈົ້າກໍໄດ້ຮັບຄວາມຮູ້ກ່ຽວກັບຕົນເອງເປັນຢ່າງດີ ແລະ ພວກເຈົ້າສືບຕໍ່ເວົ້າເຖິງສິ່ງຕ່າງໆທີ່ພວກເຈົ້າຕິດໜີ້ເຮົາ ແລະ ບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ. ແລ້ວຫຼັງຈາກນັ້ນເດ? ມັນຄືກັບວ່າເຈົ້າບໍ່ມີສ່ວນກ່ຽວຂ້ອງຫຍັງກັບສິ່ງເຫຼົ່ານີ້ເລີຍ, ຄືກັບວ່າເຈົ້າບໍ່ແມ່ນຄົນທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ. ບໍ່ແມ່ນເຈົ້າພຽງແຕ່ກືນກິນຂໍ້ມູນໂດຍບໍ່ໃຫ້ເວລາຕົນເອງເຂົ້າໃຈມັນເລີຍບໍ? ເມື່ອເຈົ້າຮັບເອົາພຣະທຳຂອງເຮົາ, ມັນເປັນຄືກັບວ່າເຈົ້າພຽງແຕ່ເຫຼືອດຕາເບິ່ງດອກໄມ້ຢ່າງໄວໃນຂະນະທີ່ເຈົ້າຂີ່ຢູ່ເທິງຫຼັງມ້າ; ເຈົ້າບໍ່ເຄີຍພະຍາຍາມເຂົ້າໃຈຈາກພຣະທຳຂອງເຮົາຢ່າງແທ້ຈິງວ່າແມ່ນຫຍັງຄືຄວາມປະສົງຂອງເຮົາ. ນີ້ຄືສິ່ງທີ່ຜູ້ຄົນເປັນ ນັ້ນກໍຄື ພວກເຂົາມັກສະແດງຄືກັບວ່າຖ່ອມຕົນຢູ່ສະເໝີ. ຄົນປະເພດນີ້ເປັນຄົນທີ່ເປັນຕາຊັງທີ່ສຸດ. ເມື່ອພວກເຂົາຢູ່ຮ່ວມກັນເພື່ອສົນທະນາກັບຄົນອື່ນ, ພວກເຂົາກໍມັກແບ່ງປັນຄວາມຮູ້ກ່ຽວກັບຕົນເອງຢູ່ຕໍ່ໜ້າຄົນອື່ນຢູ່ສະເໝີ ໂດຍເຮັດໃຫ້ຄົນອື່ນເຫັນວ່າພວກເຂົາເປັນຄົນທີ່ຄຳນຶງເຖິງພາລະຂອງເຮົາ, ແຕ່ໃນຄວາມເປັນຈິງແລ້ວ ພວກເຂົາເປັນຄົນໂງ່ຈ້າທີ່ສຸດ. (ພວກເຂົາບໍ່ສົນທະນາກັບອ້າຍເອື້ອຍນ້ອງຂອງພວກເຂົາເຖິງຄວາມເຂົ້າໃຈ ຫຼື ຄວາມຮູ້ທີ່ແທ້ຈິງທີ່ພວກເຂົາມີກ່ຽວກັບເຮົາ, ກົງກັນຂ້າມ ພວກເຂົາພຽງແຕ່ສະແດງຕົນເອງ ແລະ ໂອ້ອວດຢູ່ຕໍ່ໜ້າຄົນອື່ນ; ເຮົາກຽດຊັງຄົນເຊັ່ນນີ້ທີ່ສຸດ ຍ້ອນພວກເຂົາປະນາມ ແລະ ດູໝິ່ນເຮົາ).

ເຮົາເຮັດໃຫ້ສິ່ງອັດສະຈັນທີ່ຍິ່ງໃຫຍ່ຂອງເຮົາເປັນທີ່ປະຈັກໃນພວກເຈົ້າຢູ່ຕະຫຼອດເວລາ. ພວກເຈົ້າບໍ່ສາມາດເຫັນສິ່ງເຫຼົ່ານັ້ນບໍ? ຄົນຮັກເຮົາຢ່າງຈິງໃຈແມ່ນດຳລົງຊີວິດຢູ່ກັບສິ່ງທີ່ເອີ້ນວ່າ “ຄວາມເປັນຈິງ”. ພວກເຈົ້າເບິ່ງບໍ່ເຫັນສິ່ງນັ້ນບໍ? ສິ່ງນີ້ບໍ່ແມ່ນຫຼັກຖານອ້າງອີງທີ່ດີທີ່ສຸດທີ່ເຈົ້າໄດ້ຮູ້ຈັກເຮົາບໍ? ມັນບໍ່ເປັນພະຍານໃຫ້ກັບເຮົາໄດ້ດີກວ່າບໍ? ແຕ່ພວກເຈົ້າບໍ່ຮູ້ຈັກມັນ. ຈົ່ງບອກເຮົາເບິ່ງວ່າແມ່ນໃຜສາມາດດຳລົງຊີວິດຢູ່ກັບຄວາມຈິງເທິງໂລກທີ່ບໍ່ເປັນລະບົບລະບຽບ ເຊິ່ງເປັນໂລກທີ່ສົກກະປົກ, ເປິເປື້ອນ ແລະ ຖືກຊາຕານເຮັດໃຫ້ເສື່ອມຊາມນີ້ໄດ້ແດ່? ບໍ່ແມ່ນມະນຸດທຸກຄົນເສື່ອມຊາມ ແລະ ເຕັມໄປດ້ວຍຄວາມວ່າງເປົ່າບໍ? ເຖິງຢ່າງໃດກໍດີ, ພຣະທຳຂອງເຮົາໄດ້ໄປເຖິງຈຸດສູງສຸດຂອງພວກມັນແລ້ວ; ບໍ່ມີພຣະທຳໃດທີ່ສາມາດເຂົ້າໃຈໄດ້ງ່າຍກວ່າພຣະທຳເຫຼົ່ານີ້ອີກແລ້ວ. ແມ່ນແຕ່ຄົນໂງ່ຈ້າແທ້ໆກໍສາມາດອ່ານພຣະທຳຂອງເຮົາ ແລະ ເຂົ້າໃຈພຣະທຳເຫຼົ່ານັ້ນໄດ້, ສະນັ້ນ, ບໍ່ແມ່ນພຽງແຕ່ວ່າພວກເຈົ້າບໍ່ໄດ້ພະຍາຍາມພຽງພໍບໍ?

# ບົດທີ 64

ເຈົ້າຕ້ອງບໍ່ເຂົ້າໃຈພຣະທຳຂອງເຮົາໃນລັກສະນະທີ່ບິດເບືອນ ແລະ ຜິດພາດ; ເຈົ້າຄວນເຂົ້າໃຈພຣະທຳເຫຼົ່ານັ້ນຈາກທຸກດ້ານ ແລະ ພະຍາຍາມເຂົ້າໃຈພຣະທຳເຫຼົ່ານັ້ນຫຼາຍຍິ່ງຂຶ້ນ ແລະ ໄຕ່ຕອງພຣະທຳເຫຼົ່ານັ້ນຢ່າງລະອຽດຊໍ້າແລ້ວຊໍ້າອີກ ບໍ່ແມ່ນພຽງແຕ່ໜຶ່ງມື້ ຫຼື ໜຶ່ງຄືນເທົ່ານັ້ນ. ເຈົ້າບໍ່ຮູ້ຈັກວ່າຄວາມປະສົງຂອງເຮົາຢູ່ໃສ ຫຼື ເຮົາໄດ້ຈ່າຍລາຄາອັນພຽນພະຍາຍາມໃນດ້ານໃດ; ເຈົ້າຈະຄຳນຶງເຖິງຄວາມປະສົງຂອງເຮົາໄດ້ແນວໃດ? ນີ້ແມ່ນສິ່ງທີ່ພວກເຈົ້າທຸກຄົນເປັນ, ບໍ່ສາມາດລົງສູ່ລາຍລະອຽດຢ່າງທີ່ສຸດ, ໃສ່ໃຈພຽງແຕ່ຜິວເຜີນ ແລະ ພຽງແຕ່ສາມາດລອກແບບ. ສິ່ງນີ້ຈະຖືກເອີ້ນວ່າຄວາມເຊື່ອຝ່າຍວິນຍານໄດ້ແນວໃດ? ມັນເປັນພຽງຄວາມກະຕືລືລົ້ນຂອງມະນຸດເທົ່ານັ້ນ; ມັນເປັນສິ່ງເຮົາບໍ່ຍົກຍ້ອງ ແລະ ຍິ່ງໄປກວ່ານັ້ນ ມັນເປັນສິ່ງທີ່ເຮົາກຽດຊັງ. ເຮົາເວົ້າກັບເຈົ້າວ່າ: ທຸກສິ່ງທີ່ເຮົາກຽດຊັງຕ້ອງຖືກກຳຈັດຖິ້ມ, ຕ້ອງອ່ອນກຳລັງໃນໄພພິບັດ ແລະ ຕ້ອງຜ່ານການເຜົາໄໝ້ ແລະ ການພິພາກສາຂອງເຮົາ. ບໍ່ດັ່ງນັ້ນ ຜູ້ຄົນຈະບໍ່ຮູ້ວ່າ ການຢ້ານຢຳເກງໝາຍເຖິງຫຍັງ ແລະ ຈະມຶນເມົາຫຼາຍ, ເບິ່ງເຮົາດ້ວຍສາຍຕາຂອງມະນຸດຢູ່ສະເໝີ, ພວກເຂົາຊ່າງໂງ່ຈ້າຫຼາຍ! ວິທີທີ່ດີທີ່ສຸດໃນການກຳຈັດແນວຄິດຂອງຊາຕານອອກຈາກຕົວເຈົ້າຄືການຫຍັບເຂົ້າໃກ້ເຮົາ ແລະ ສື່ສານກັບເຮົາ. ເຮົາຕ້ອງການໃຫ້ພວກເຈົ້າທຸກຄົນປະຕິບັດຕາມກົດລະບຽບນີ້ເພື່ອຫຼີກຫຼ່ຽງການຖືກພິພາກສາ ແລະ ການປະສົບກັບຄວາມສູນເສຍໃນຊີວິດຂອງເຈົ້າ.

ມະນຸດແມ່ນຈັດການຍາກຫຼາຍ, ຢູ່ພາຍໃຕ້ການຄວບຄຸມຂອງຄົນ, ເຫດການ ແລະ ສິ່ງຕ່າງໆທີ່ຢູ່ພາຍນອກຢູ່ສະເໝີ ພ້ອມທັງແນວຄິດຂອງພວກເຂົາເອງ. ຜົນຕາມມາກໍຄື ພວກເຂົາບໍ່ສາມາດເປັນພະຍານທີ່ດີໃຫ້ກັບເຮົາໄດ້ ແລະ ບໍ່ສາມາດຮ່ວມມືເປັນຢ່າງດີກັບເຮົາ. ເຮົາສະໜັບສະໜູນພວກເຈົ້າ ແລະ ສົ່ງເສີມພວກເຈົ້າຢ່າງສະໝໍ່າສະເໝີ, ແຕ່ພວກເຈົ້າບໍ່ສາມາດເຮັດສຸດຄວາມສາມາດຂອງພວກເຈົ້າເພື່ອຮ່ວມມືກັບເຮົາ. ທຸກສິ່ງເຫຼົ່ານີ້ສະແດງອອກຢ່າງຫຼວງຫຼາຍເຖິງການທີ່ພວກເຈົ້າຂາດຄວາມເຂົ້າໃຈກ່ຽວກັບເຮົາ. ເມື່ອເວລາມາເຖິງ ນັ້ນກໍຄື ເມື່ອເຈົ້າບໍ່ສົງໄສເຮົາອີກຕໍ່ໄປເລີຍ, ບໍ່ມີໃຜທີ່ສາມາດຂັດຂວາງເຈົ້າບໍ່ໃຫ້ຍ່າງໃນຫົນທາງທີ່ຖືກຕ້ອງໄດ້ ແລະ ບໍ່ມີແນວຄິດໃດຂອງມະນຸດທີ່ຈະມີອຳນາດເໜືອເຈົ້າໄດ້. ເປັນຫຍັງເຮົາຈຶ່ງເວົ້າແບບນີ້? ເຈົ້າເຂົ້າໃຈຄວາມໝາຍຂອງພຣະຄຳຂອງເຮົາແທ້ໆບໍ? ມີແຕ່ເມື່ອເຮົາໄດ້ຊີ້ແຈງພຣະທຳແບບນີ້ ພວກເຈົ້າຈຶ່ງມີຄວາມເຂົ້າໃຈໜ້ອຍໜຶ່ງ. ຜູ້ຄົນໂງ່ຈ້າແບບນີ້ ແລະ ອ່ອນແອຫຼາຍໃນຫົວ. ມີແຕ່ເມື່ອເຂັມຕຳກະດູກ ພວກເຂົາຈຶ່ງຈະເລີ່ມຮູ້ສຶກເຖິງຄວາມເຈັບປວດເລັກນ້ອຍ. ນັ້ນກໍຄື ມີແຕ່ເມື່ອພຣະທຳຂອງເຮົາໄດ້ຊີ້ເຖິງບໍ່ເກີດຂອງຄວາມເຈັບປ່ວຍຂອງເຈົ້າ ເຈົ້າຈຶ່ງຈະໝັ້ນໃຈຢ່າງສົມບູນ. ເຖິງຢ່າງໃດກໍຕາມ, ໃນບາງຄັ້ງ ພວກເຈົ້າກໍຍັງບໍ່ເຕັມໃຈທີ່ຈະນຳພຣະທຳຂອງເຮົາເຂົ້າສູ່ການປະຕິບັດ ຫຼື ຮູ້ຈັກຕົນເອງ. ໃນຈຸດນີ້, ເປັນຫຍັງພວກເຈົ້າຈຶ່ງຍັງບໍ່ຮັບຮູ້ວ່າ ມະນຸດນັ້ນຈັດການຍາກສໍ່າໃດ? ມັນເປັນເພາະພຣະທຳຂອງເຮົາບໍ່ຊັດເຈນ ຫຼື ຊັດແຈ້ງພໍບໍ? ສິ່ງທີ່ເຮົາຕ້ອງການກໍຄືໃຫ້ພວກເຈົ້າຮ່ວມມືກັບເຮົາ ທັງຢ່າງຈິງຈັງ ແລະ ຢ່າງຈິງໃຈ; ບໍ່ວ່າເຈົ້າຈະກ່າວຄຳເວົ້າທີ່ຟັງເບິ່ງຄືດີ

ຫຼື ບໍ່ກໍຕາມ, ຕາບໃດທີ່ເຈົ້າເຕັມໃຈທີ່ຈະຮ່ວມມືກັບເຮົາ ແລະ ສາມາດນະມັດສະການເຮົາຢ່າງຈິງໃຈ, ເຈົ້າຈະມາຢູ່ພາຍໃຕ້ການປົກປ້ອງຂອງເຮົາ. ເຖິງແມ່ນຄົນປະເພດນີ້ບໍ່ມີຄວາມຮູ້ຫຼາຍ, ເຮົາກໍຈະສ່ອງແສງສະຫວ່າງໃຫ້ກັບພວກເຂົາເພື່ອວ່າພວກເຂົາອາດໂຍນຖິ້ມຄວາມບໍ່ຮູ້ຂອງພວກເຂົາ. ນີ້ແມ່ນຍ້ອນການກະທຳຂອງເຮົາຈຳເປັນຕ້ອງສອດຄ່ອງກັບພຣະທຳຂອງເຮົາ; ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ ຜູ້ທີ່ບໍ່ເຄີຍເຮັດສັນຍາໂດຍທີ່ພຣະອົງບໍ່ສາມາດຮັກສາໄດ້.

ເຮົາຈະເປີດເຜີຍຄວາມປະສົງຂອງເຮົາໃຫ້ກັບຄຣິສຕະຈັກ ແລະ ລູກຊາຍກົກທຸກຄົນໃນທັນທີ ແລະ ບໍ່ມີຫຍັງທີ່ຈະລີ້ລັບອີກຕໍ່ໄປ, ຍ້ອນມື້ທີ່ທຸກສິ່ງຖືກເປີດເຜີຍໄດ້ມາເຖິງແລ້ວ. ນັ້ນໝາຍຄວາມວ່າຄຳວ່າ "ລີ້ລັບ" ຈະບໍ່ຖືກນຳໃຊ້ອີກຕັ້ງແຕ່ນີ້ເປັນຕົ້ນໄປ, ແຮງໄກທີ່ສິ່ງລີ້ລັບຈະສືບຕໍ່ມີຢູ່. ຜູ້ຄົນ, ເຫດການ ແລະ ສິ່ງຂອງທີ່ລີ້ລັບທັງໝົດຕ້ອງຖືກເປີດໂປງເທື່ອລະອັນຢ່າງແນ່ນອນ. ເຮົາເປັນພຣະເຈົ້າທີ່ເຕັມໄປດ້ວຍສະຕິປັນຍາ ຜູ້ທີ່ມີສິດອຳນາດຢ່າງສົມບູນ. ທຸກເຫດການ, ທຸກສິ່ງ ແລະ ທຸກໆຄົນແມ່ນຖືກຈັບຢູ່ພາຍໃນມືຂອງເຮົາ. ເຮົາໃຊ້ບາດກ້າວຂອງເຮົາເອົາເພື່ອເປີດເຜີຍສິ່ງເຫຼົ່ານັ້ນ ແລະ ເຮົາຈະເປີດເຜີຍສິ່ງເຫຼົ່ານັ້ນອອກເທື່ອລະຢ່າງ, ໃນລັກສະນະທີ່ເປັນລະບົບລະບຽບ. ສຳລັບໃຜກໍຕາມທີ່ກ້າຊັກຈູງເຮົາ ຫຼື ພະຍາຍາມປົດບັງຫຍັງຈາກເຮົາ, ເຮົາຮັບປະກັນວ່າພວກເຂົາຈະບໍ່ລຸກຂຶ້ນອີກຈັກເທື່ອ. ເຮົາຈະລົງມືປະຕິບັດໃນລັກສະນະນີ້ເພື່ອວ່າ ມັນຈະເປັນທີ່ຊັດເຈນທັງໝົດໃຫ້ພວກເຈົ້າໄດ້ເຫັນ. ຈົ່ງເບິ່ງຢ່າງຊັດເຈນ! ລາຄາອັນພຽນພະຍາຍາມທີ່ເຮົາໄດ້ຈ່າຍແມ່ນບໍ່ໄດ້ສູນເປົ່າ ມັນຈະເກີດຜົນ. ໃຜກໍຕາມທີ່ບໍ່ໃສ່ໃຈ ຫຼື ເຊື່ອຟັງກໍຈະພົບພໍ້ກັບການພິພາກສາຂອງເຮົາທັນທີ. ຜູ້ໃດຍັງກ້າລຸກຂຶ້ນຕໍ່ຕ້ານເຮົາ? ພວກເຈົ້າທຸກຄົນຕ້ອງເຊື່ອຟັງເຮົາ. ເຮົາເວົ້າກັບເຈົ້າວ່າ ທຸກສິ່ງທີ່ເຮົາກ່າວ ແລະ ເຮັດ, ທຸກການກະທຳ, ແນວຄິດ, ຄວາມຄິດ ແລະ ການອອກແບບທີ່ເຮົາມີໃນປັດຈຸບັນນີ້ແມ່ນລ້ວນແລ້ວແຕ່ຖືກຕ້ອງຢ່າງສົມບູນ; ພວກມັນປະໃຫ້ມະນຸດມີພື້ນທີ່ວ່າງໃນການພິຈາລະນາເພີ່ມເຕີມ. ເປັນຫຍັງເຮົາຈຶ່ງເວົ້າກັບພວກເຈົ້າຄັ້ງແລ້ວຄັ້ງເລົ່າວ່າ ພວກເຈົ້າພຽງແຕ່ຕ້ອງປະຕິບັດຕາມ ແລະ ບໍ່ຈຳເປັນຕ້ອງຄິດກ່ຽວກັບສິ່ງນັ້ນອີກຕໍ່ໄປ? ມັນແມ່ນຍ້ອນເຫດຜົນນີ້. ເຈົ້າຍັງຕ້ອງການໃຫ້ເຮົາຊີ້ແຈງມັນບໍ?

ແນວຄິດຂອງພວກເຈົ້າມີອຳນາດເໜືອພວກເຈົ້າ, ແຕ່ພວກເຈົ້າກໍບໍ່ຄິດວ່າມັນແມ່ນຍ້ອນພວກເຈົ້າເອງທີ່ບໍ່ໄດ້ພະຍາຍາມພໍ. ກົງກັນຂ້າມ ພວກເຈົ້າເບິ່ງທີ່ເຮົາເພື່ອຫາສາເຫດ ໂດຍເວົ້າວ່າເຮົາບໍ່ໄດ້ສ່ອງແສງສະຫວ່າງໃຫ້ກັບເຈົ້າ, ນີ້ແມ່ນການເວົ້າແບບໃດ? ເຈົ້າເອງບໍ່ມີຄວາມຮັບຜິດຊອບ ແລະ ຕໍ່ວ່າເຮົາຢູ່ສະເໝີ. ເຮົາກຳລັງເຕືອນເຈົ້າ! ຖ້າເຈົ້າສືບຕໍ່ເຮັດແບບນີ້, ສືບຕໍ່ບໍ່ຈ່າຍລາຄາຫຍັງເລີຍ, ແລ້ວເຈົ້າກໍຈະຖືກໂຍນຖິ້ມ! ເຮົາບໍ່ໄດ້ເວົ້າໃຫຍ່ໝົດມື້ເພື່ອຂູ່ຂວັນພວກເຈົ້າ. ແນ່ນອນ ນີ້ແມ່ນຄວາມຈິງ: ເຮົາເຮັດໃນສິ່ງທີ່ເຮົາເວົ້າ. ທັນທີທີ່ພຣະທຳອອກຈາກປາກຂອງເຮົາ, ພຣະທຳເຫຼົ່ານັ້ນກໍຈະເລີ່ມສຳເລັດທັນທີ. ເມື່ອກ່ອນ ພຣະທຳທີ່ເຮົາກ່າວແມ່ນສຳເລັດຢ່າງຊ້າໆ; ຕອນນີ້ ສິ່ງຕ່າງໆແມ່ນແຕກຕ່າງແລ້ວ ແລະ ຈະບໍ່ເກີດຂຶ້ນຢ່າງຊ້າໆອີກຕໍ່ໄປ. ຖ້າຈະເວົ້າໃຫ້ຊັດເຈນກໍຄື ເຮົາຈະບໍ່ຍູ້ ແລະ ຊັກຊວນອີກຕໍ່ໄປ; ກົງກັນຂ້າມ ເຮົາຈະກະຕຸ້ນ ແລະ ບັງຄັບພວກເຈົ້າໄປນຳ. ຖ້າຈະເວົ້າໃຫ້ຊັດເຈນຍິ່ງຂຶ້ນກໍຄື ຄົນທີ່ຕາມທັນກໍຈະທັນ, ໃນຂະນະທີ່ຄົນທີ່ບໍ່ສາມາດຕາມທັນ ແລະ ຄົນທີ່ບໍ່ສາມາດສືບຕໍ່ໄປຂ້າງໜ້າກໍຈະຖືກ

ກຳຈັດຖິ້ມ. ເຮົາເຄີຍເວົ້າກັບພວກເຈົ້າຢ່າງອົດທົນດ້ວຍທຸກວິທີທີ່ເປັນໄປໄດ້, ແຕ່ພວກເຈົ້າພຽງແຕ່ບໍ່ໄດ້ຟັງ. ບັດນີ້ເມື່ອພາລະກິດໄດ້ສືບຕໍ່ຈົນເຖິງຂັ້ນຕອນນີ້ແລ້ວ, ພວກເຈົ້າຈະເຮັດແນວໃດ? ພວກເຈົ້າຈະສືບຕໍ່ໝົກມຸ້ນກັບຕົນເອງແທ້ໆບໍ? ຄົນດັ່ງກ່າວບໍ່ສາມາດຖືກເຮັດໃຫ້ສົມບູນໄດ້, ແຕ່ຈະຖືກກຳຈັດໂດຍເຮົາຢ່າງແນ່ນອນ!

# ບົດທີ 65

ພຣະທຳຂອງເຮົາຍິງຖືກຈຸດອ່ອນຂອງພວກເຈົ້າຢູ່ສະເໝີ ຊຶ່ງຊີ້ໃຫ້ເຫັນຈຸດອ່ອນທີ່ຮ້າຍແຮງຂອງພວກເຈົ້າ, ຖ້າບໍ່ດັ່ງນັ້ນ ພວກເຈົ້າກໍຈະຄຶງລາກສິ້ນບ່ອງຂອງພວກເຈົ້າ ໂດຍບໍ່ຮູ້ຈັກວ່າຕອນນີ້ເວລາຈັກໂມງແລ້ວ. ຈົ່ງຮູ້ຈັກເລື່ອງນີ້! ເຮົາໃຊ້ຫົນທາງແຫ່ງຄວາມຮັກເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນ. ບໍ່ວ່າພວກເຈົ້າປະພຶດຕົນແນວໃດກໍ່ຕາມ, ເຮົາກໍຈະເຮັດສຳເລັດສິ່ງຕ່າງໆທີ່ເຮົາໄດ້ອະນຸມັດໄປແລ້ວຢ່າງແນ່ນອນ ແລະ ບໍ່ມີຂໍ້ຜິດພາດໃດໆ. ເປັນໄປໄດ້ບໍທີ່ເຮົາຜູ້ເປັນພຣະເຈົ້າອົງຊົງລິດທານຸພາສູງສຸດທີ່ຊອບທຳຈະສາມາດເຮັດຜິດພາດໄດ້? ນີ້ບໍ່ແມ່ນແນວຄວາມຄິດຂອງມະນຸດບໍ? ບອກເຮົາແດ່ວ່າ ທຸກສິ່ງທຸກຢ່າງທີ່ເຮົາກະທຳ ແລະ ກ່າວນັ້ນ ບໍ່ແມ່ນເພື່ອຜົນປະໂຫຍດຂອງພວກເຈົ້າບໍ່? ບາງຄົນຈະເວົ້າຢ່າງອ່ອນນ້ອມວ່າ: “ໂອ ພຣະເຈົ້າ! ທຸກສິ່ງທຸກຢ່າງທີ່ພຣະອົງຊົງກະທຳ ແມ່ນເພື່ອພວກຂ້ານ້ອຍ, ແຕ່ວ່າ ພວກຂ້ານ້ອຍ ບໍ່ຮູ້ວ່າຈະສະແດງຮ່ວມກັບພຣະອົງແນວໃດ”. ຊ່າງໄຮ້ດຽງສາແທ້ເດ! ເຈົ້າຍັງໄປໄກເຖິງຂັ້ນເວົ້າວ່າ ພວກເຈົ້າບໍ່ຮູ້ຈັກວ່າຈະຮ່ວມມືກັບເຮົາແນວໃດນັ້ນ! ສິ່ງເຫຼົ່ານີ້ທັງໝົດລ້ວນແລ້ວແມ່ນເປັນການຂີ້ຕົວະທີ່ໜ້າອັບອາຍທີ່ສຸດ! ໃນເມື່ອພວກເຈົ້າກ່າວສິ່ງຕ່າງໆເຊັ່ນນີ້, ແລ້ວເຫດໃດ ໃນຄວາມເປັນຈິງ ພວກເຈົ້າຈຶ່ງສະແດງຄວາມສົນໃຈທາງເນື້ອໜັງຊ້ຳແລ້ວຊ້ຳອີກ? ຄຳເວົ້າຂອງພວກເຈົ້າຟັງຄືວ່າດີ, ແຕ່ພວກເຈົ້າບໍ່ໄດ້ປະພຶດໃນລັກສະນະທີ່ງ່າຍດາຍ ແລະ ສວຍງາມ. ພວກເຈົ້າຕ້ອງເຂົ້າໃຈສິ່ງນີ້: ເຮົາບໍ່ໄດ້ຮຽກຮ້ອງຫຍັງຫຼາຍຈາກພວກເຈົ້າໃນມື້ນີ້ ຫຼື ຂໍ້ຮຽກຮ້ອງຂອງເຮົາຢູ່ນອກເໜືອຄວາມເຂົ້າໃຈຂອງພວກເຈົ້າ, ກົງກັນຂ້າມ ພວກມັນເປັນສິ່ງທີ່ມະນຸດສາມາດບັນລຸໄດ້. ເຮົາບໍ່ໄດ້ປະເມີນພວກເຈົ້າສູງເກີນໄປແມ່ນແຕ່ໜ້ອຍເລີຍ; ເຮົາບໍ່ຮູ້ຂອບເຂດຄວາມສາມາດຂອງມະນຸດເລີຍບໍ? ເຮົາມີຄວາມເຂົ້າໃຈມັນຢ່າງຊັດເຈນທີ່ສຸດ.

ພຣະທຳຂອງເຮົາໃຫ້ແສງສະຫວ່າງແກ່ພວກເຈົ້າສະເໝີ, ແຕ່ໃຈຂອງພວກເຈົ້າແຂງກະດ້າງເກີນໄປ ແລະ ພວກເຈົ້າບໍ່ສາມາດເຂົ້າໃຈເຖິງຄວາມປະສົງຂອງເຮົາພາຍໃນຈິດວິນຍານຂອງພວກເຈົ້າ! ບອກເຮົາແດ່: ເຮົາໄດ້ເຕືອນພວກເຈົ້າຈັກເທື່ອແລ້ວວ່າ ບໍ່ໃຫ້ໃສ່ໃຈເລື່ອງອາຫານ, ເຄື່ອງນຸ່ງຫົ່ມ ຫຼື ຮູບພາບພາຍນອກຂອງພວກເຈົ້າ, ແຕ່ຈົ່ງໃສ່ໃຈຊີວິດດ້ານໃນຂອງເຈົ້າແທນ? ແຕ່ພວກເຈົ້າ ບໍ່ຍອມເຊື່ອຟັງເລີຍ. ເຮົາເມື່ອຍເວົ້າເລື່ອງນີ້ແລ້ວ. ພວກເຈົ້າດື້ດ້ານປານນີ້ບໍ? ພວກເຈົ້າຂາດສະຕິເຖິງຂະໜາດນີ້ແລ້ວບໍ່? ພຣະທຳຂອງເຮົາທີ່ໄດ້ກ່າວໄປນັ້ນ ໄຮ້ສາລະປານນັ້ນພຸ້ນບໍ? ເຮົາໄດ້ເວົ້າຫຍັງຜິດໄປບໍ່? ລູກຊາຍທັງຫລາຍຂອງເຮົາເອີຍ! ຈົ່ງມີນໍ້າໃຈຕໍ່ເຈດຕະນາທີ່ຈິງໃຈຂອງເຮົາດ້ວຍ! ເມື່ອຊີວິດຂອງພວກເຈົ້າເຕີບໂຕແລ້ວ ກໍບໍ່ຈຳເປັນຕ້ອງກັງວົນຫຍັງອີກຕໍ່ໄປ ແລະ ທຸກສິ່ງທຸກຢ່າງກໍຈະຖືກສະໜອງໃຫ້. ຕອນນີ້ບໍ່ມີຄຸນຄ່າຫຍັງທີ່ຈະສຸມໃສ່ສິ່ງເຫຼົ່ານັ້ນ. ອານາຈັກຂອງເຮົາ ໄດ້ມີການຮັບຮູ້ຢ່າງທົ່ວເຖິງ ແລະ ໄດ້ລົງມາສູ່ໂລກຢ່າງເປີດເຜີຍແລ້ວ; ສິ່ງນີ້ ສະແດງໃຫ້ເຫັນວ່າ ການພິພາກສາຂອງເຮົາໄດ້ມາເຖິງຢ່າງສົມບູນ. ພວກເຈົ້າໄດ້ປະສົບກັບມັນແລ້ວບໍ? ເຮົາບໍ່ຢາກພິພາກສາພວກເຈົ້າ, ແຕ່ພວກເຈົ້າບໍ່ສະແດງຄວາມສົນໃຈກັບຈິດໃຈຂອງເຮົາແຕ່ຢ່າງໃດເລີຍ. ມັນແມ່ນຄວາມປາຖະໜາຂອງເຮົາທີ່ຢາກໃຫ້ພວກເຈົ້າໄດ້

ຮັບການເບິ່ງແຍງ ແລະ ການປົກປ້ອງດ້ວຍຄວາມຮັກຂອງເຮົາ ແທນທີ່ຈະເປັນການພິພາກສາທີ່ໄຮ້ຄວາມເມດຕາ. ອາດເປັນໄປໄດ້ບໍ່ວ່າ ພວກເຈົ້າເຕັມໃຈທີ່ຈະຖືກພິພາກສາ? ຖ້າບໍ່ໄດ້ເຕັມໃຈ, ແລ້ວເປັນຫຍັງພວກເຈົ້າບໍ່ເຂົ້າມາໃກ້ຊິດກັບເຮົາ, ໂອ້ລົມກັບເຮົາ ແລະ ມີການພົວພັນກັບເຮົາຈັກເທື່ອ? ພວກເຈົ້າປະຕິບັດຕໍ່ເຮົາຢ່າງເຢືອກເຢັນ ແຕ່ເມື່ອຊາຕານໃຫ້ແນວຄິດກັບເຈົ້າ ເຈົ້າກໍຮູ້ສຶກປິຕິຍິນດີຄິດວ່າແນວຄິດນັ້ນສອດຄ່ອງກັບຄວາມປາຖະໜາຂອງເຈົ້າ, ແຕ່ເຈົ້າບໍ່ໄດ້ເຮັດສິ່ງໃດ ເພື່ອຜົນປະໂຫຍດຂອງເຮົາເລີຍ. ພວກເຈົ້າຍາມໃດກໍປາຖະໜາທີ່ຈະປະຕິບັດກັບເຮົາດ້ວຍຄວາມໂຫດຮ້າຍແບບນັ້ນບໍ?

ບໍ່ແມ່ນວ່າ ເຮົາບໍ່ປາຖະໜາທີ່ຈະມອບໃຫ້ເຈົ້າ, ແຕ່ຍ້ອນວ່າ ພວກເຈົ້າບໍ່ເຕັມໃຈທີ່ຈະຈ່າຍລາຄາ. ດັ່ງນັ້ນ ພວກເຈົ້າຈະມີແຕ່ມືເປົ່າ, ບໍ່ໄດ້ຖືຫຍັງເລີຍ. ພວກເຈົ້າບໍ່ເຫັນບໍ່ວ່າ ພາລະກິດຂອງພຣະວິນຍານບໍລິສຸດກ້າວໜ້າຢ່າງວ່ອງໄວພຽງໃດ? ພວກເຈົ້າບໍ່ເຫັນບໍ່ວ່າ ຫົວໃຈຂອງເຮົາຮ້ອນຮົນດ້ວຍຄວາມກັງວົນ? ເຮົາຂໍໃຫ້ພວກເຈົ້າຮ່ວມມືກັບເຮົາ ແຕ່ພວກເຈົ້າກໍຍັງບໍ່ເຕັມໃຈ. ໄພພິບັດທຸກຮູບແບບຈະເກີດຂຶ້ນຢ່າງຕໍ່ເນື່ອງ; ທຸກຊາດ ແລະ ທຸກສະຖານທີ່ ຈະປະສົບກັບໄພພິບັດເຊັ່ນ: ໂລກລະບາດ, ໄພອຶດຫິວ, ນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວຈະເກີດຂຶ້ນຢູ່ທຸກບ່ອນ. ໄພພິບັດເຫຼົ່ານີ້ ຈະເກີດຂຶ້ນບໍ່ສະເພາະຢູ່ບ່ອນໜຶ່ງບ່ອນດຽວ ຫລື ສອງບ່ອນ ຫຼື ຈະບໍ່ເກີດຂຶ້ນພຽງແຕ່ພາຍໃນໜຶ່ງມື້ ຫຼື ສອງມື້, ແຕ່ກົງກັນຂ້າມ ພວກມັນຈະຂະຫຍາຍອອກໄປທົ່ວທຸກແຫ່ງຫົນ ແລະ ຈະຮ້າຍແຮງຂຶ້ນເລື້ອຍໆ. ຢູ່ໃນໄລຍະນີ້ ຈະເກີດການລະບາດຂອງແມງໄມ້ທຸກຊະນິດເກີດຂຶ້ນຢ່າງຕໍ່ເນື່ອງກັນ ແລະ ຈະເກີດມີປະກົດການກິນຊີ້ນມະນຸດເກີດຂຶ້ນຢູ່ທຸກຫົນແຫ່ງ. ນີ້ແມ່ນການພິພາກສາຂອງເຮົາຕໍ່ທຸກຊາດ ແລະທຸກຊົນຊາດ. ລູກຊາຍທັງຫລາຍຂອງເຮົາເອີຍ! ພວກເຈົ້າ ບໍ່ຕ້ອງທົນທຸກທໍລະມານກັບຄວາມເຈັບປວດ ຫຼື ຄວາມລຳບາກຈາກໄພພິບັດເຫລົ່ານັ້ນ. ມັນແມ່ນຄວາມປາຖະໜາຂອງເຮົາທີ່ຈະໃຫ້ພວກເຈົ້າເຕີບໃຫຍ່ໂດຍໄວ ແລະ ໄວເທົ່າທີ່ເປັນໄປໄດ້, ຮັບເອົາພາລະຢູ່ເທິງບ່າຂອງເຮົາ. ເປັນຫຍັງພວກເຈົ້າຈຶ່ງບໍ່ເຂົ້າໃຈຄວາມປະສົງຂອງເຮົາ? ພາລະກິດຢູ່ເບື້ອງໜ້າ ຍິ່ງຈະຫຍຸ້ງຍາກຂຶ້ນເລື້ອຍໆ. ພວກເຈົ້າໃຈແຂງເຖິງຂັ້ນຈະໜີຈາກເຮົາໂດຍທີ່ມືຂອງເຮົາບໍ່ຫວ່າງທີ່ຈະປະຕິບັດພາລະກິດອັນໜັກໜ່ວງດ້ວຍຕົນເອງແບບນີ້ບໍ່? ເຮົາຂໍເວົ້າຢ່າງຈະແຈ້ງຍິ່ງຂຶ້ນວ່າ: ຄົນທີ່ມີຊີວິດເປັນຜູ້ໃຫຍ່ ຈະເຂົ້າສູ່ບ່ອນລີ້ໄພ ແລະ ຈະບໍ່ທົນທຸກທໍລະມານກັບຄວາມເຈັບປວດ ຫລື ຄວາມຍາກລຳບາກ; ຜູ້ທີ່ມີຊີວິດບໍ່ເຕີບໃຫຍ່ ຕ້ອງທົນທຸກທໍລະມານກັບຄວາມເຈັບປວດ ແລະ ໄພອັນຕະລາຍ. ພຣະທຳຂອງເຮົາຊັດເຈນພຽງພໍ ແມ່ນບໍ່?

ຊື່ຂອງເຮົາຕ້ອງແຜ່ຂະຫຍາຍໄປທົ່ວທຸກສາລະທິດ ແລະ ທົ່ວທຸກບ່ອນ ເພື່ອວ່າທຸກຄົນຈະໄດ້ຮູ້ຈັກຊື່ອັນບໍລິສຸດຂອງເຮົາ ແລະ ຮູ້ຈັກເຮົາ. ຄົນທຸກສາຂາອາຊີບ ແລະ ທຸກຊັ້ນຄົນ ທີ່ຢູ່ປະເທດສະຫະລັດອາເມລິກາ, ຍີ່ປຸ່ນ, ການາດາ, ສິງກະໂປ, ສະຫະພາບໂຊວຽດ, ມາເກົາ, ຮົ່ງກົງ ແລະ ປະເທດອື່ນໆ ຈະພາກັນຫລັ່ງໄຫລເຂົ້າສູ່ປະເທດຈີນຢ່າງຮີບດ່ວນ ເພື່ອຄົ້ນຫາວິທີທາງທີ່ຖືກຕ້ອງ. ຊື່ຂອງເຮົາໄດ້ຖືກຢືນຢັນຕໍ່ພວກເຂົາແລ້ວ; ແລະ ສິ່ງທີ່ຫຼົງເຫຼືອກໍຄືໃຫ້ພວກເຈົ້າເປັນຜູ້ໃຫຍ່ໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອວ່າ ພວກເຈົ້າຈະໄດ້ເບິ່ງແຍງ ແລະ ນຳພາພວກເຂົາ. ນີ້ຄືເຫດຜົນທີ່ເຮົາກ່າວວ່າ ມີພາລະກິດອີກຫຼາຍທີ່ຕ້ອງເຮັດ. ຊື່ຂອງເຮົາຈະກະຈາຍອອກຢ່າງກວ້າງຂວາງ ເມື່ອເກີດໄພພິບັດຂຶ້ນ ແລະ ຖ້າຫາກ

ພວກເຈົ້າບໍ່ລະມັດລະວັງ ພວກເຈົ້າກໍຈະສູນເສຍສ່ວນແບ່ງທີ່ຖືກຕ້ອງຂອງພວກເຈົ້າໄປ. ພວກເຈົ້າບໍ່ຢ້ານບໍ? ຊື່ຂອງເຮົາກະຈາຍໄປທົ່ວທຸກສາສະໜາ, ທຸກສາຂາອາຊີບ ແລະ ທຸກຊັ້ນຄົນ, ທຸກຊາດ ແລະ ທຸກນິກາຍ. ນີ້ແມ່ນພາລະກິດຂອງເຮົາທີ່ກຳລັງຖືກປະຕິບັດຢ່າງເປັນລະບຽບ ແລະ ມີການເຊື່ອມໂຍງກັນຢ່າງໃກ້ຊິດ; ທຸກສິ່ງນີ້ເກີດຂຶ້ນຈາກການຈັດແຈງຢ່າງສະຫຼາດຂອງເຮົາ. ເຮົາພຽງແຕ່ປາຖະໜາໃຫ້ພວກເຈົ້າສາມາດກ້າວໄປຂ້າງໜ້າດ້ວຍທຸກບາດກ້າວ ດຳເນີນຕາມຮອຍບາດກ້າວຂອງເຮົາຢ່າງໃກ້ຊິດ.

# ບົດທີ 66

ພາລະກິດຂອງເຮົາສືບຕໍ່ຈົນເຖິງຂັ້ນຕອນນີ້ ແລະ ທັງໝົດລ້ວນແລ້ວແຕ່ປະຕິບັດຕາມການຈັດແຈງທີ່ເຕັມໄປດ້ວຍສະຕິປັນຍາຈາກກຳມືຂອງເຮົາ ແລະ ທັງໝົດມັນເປັນຄວາມສຳເລັດທີ່ຍິ່ງໃຫຍ່ຂອງເຮົາ. ແມ່ນໃຜທ່າມກາງມະນຸດຊາດທີ່ສາມາດເຮັດສິ່ງດັ່ງກ່າວນັ້ນໄດ້ແດ່? ກົງກັນຂ້າມ ມັນບໍ່ແມ່ນໃນກໍລະນີທີ່ຜູ້ຄົນລົບກວນການຈັດການຂອງເຮົາບໍ? ເຖິງຢ່າງໃດກໍຕາມ ເຈົ້າຕ້ອງຮູ້ວ່າ ບໍ່ມີຄົນໃດສາມາດປະຕິບັດພາລະກິດຂອງເຮົາແທນເຮົາໄດ້, ແລ້ວແຮງໄກທີ່ຈະຂັດຂວາງພາລະກິດນັ້ນໄດ້ ນັ້ນກໍຍ້ອນວ່າ ບໍ່ມີຜູ້ໃດເລີຍທີ່ສາມາດກ່າວ ຫຼື ເຮັດສິ່ງຕ່າງໆທີ່ເຮົາເຮັດ ແລະ ກ່າວໄດ້. ເຖິງສິ່ງນີ້ເປັນຄວາມຈິງ, ຜູ້ຄົນກໍຍັງບໍ່ຮູ້ຈັກເຮົາ, ເຮົາຜູ້ທີ່ມີສະຕິປັນຍາ, ຜູ້ທີ່ເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ! ພາຍນອກ ເຈົ້າບໍ່ກ້າທ້າທາຍເຮົາຢ່າງເປີດເຜີຍ, ແຕ່ໃນຫົວໃຈຂອງເຈົ້າ ແລະ ໃນຄວາມຄິດຂອງເຈົ້າ, ເຈົ້າຕັ້ງຕົນເອງເປັນປໍລະປັກຕໍ່ເຮົາ. ຄົນໂງ່ເອີຍ! ເຈົ້າບໍ່ຮູ້ບໍວ່າ ເຮົາເປັນພຣະເຈົ້າທີ່ເຝົ້າເບິ່ງສ່ວນເລິກສຸດໃນຫົວໃຈຂອງມະນຸດ? ເຈົ້າບໍ່ຮູ້ບໍວ່າ ເຮົາເຝົ້າເບິ່ງຄຳເວົ້າ ແລະ ການກະທຳທຸກຢ່າງຂອງເຈົ້າ? ເຮົາຂໍເວົ້າກັບເຈົ້າດັ່ງນີ້: ເຮົາຈະບໍ່ກ່າວພຣະທຳອັນອ່ອນໂຍນອອກຈາກຣິມສົບຂອງເຮົາອີກຕໍ່ໄປ. ກົງກັນຂ້າມມັນຈະເປັນພຣະທຳແຫ່ງການພິພາກສາຢ່າງໜັກ ແລະ ເຮົາຈະເບິ່ງວ່າ ເຈົ້າສາມາດທົນຕໍ່ພຣະທຳເຫຼົ່ານັ້ນໄດ້ ຫຼື ບໍ່. ຕັ້ງແຕ່ນີ້ຕໍ່ໄປ, ຄົນທີ່ມີຫົວໃຈທີ່ບໍ່ໃກ້ຊິດກັບເຮົາ ໝາຍເຖິງຄົນທີ່ບໍ່ມີຄວາມຮັກຢ່າງຈິງໃຈສຳລັບເຮົາແມ່ນຄົນທີ່ທ້າທາຍເຮົາຢ່າງເປີດເຜີຍ.

ໃນປັດຈຸບັນ, ພາລະກິດຂອງພຣະວິນຍານບໍລິສຸດໄດ້ມາເຖິງຈຸດທີ່ຈະບໍ່ມີການນຳໃຊ້ວິທີການແບບເກົ່າອີກຕໍ່ໄປ; ກົງກັນຂ້າມ ວິທີການໃໝ່ແມ່ນກຳລັງຖືກປະຕິບັດແທນ. ຄົນທີ່ບໍ່ຮ່ວມມືກັບເຮົາຢ່າງເດັດຂາດ ແລະ ຢ່າງຫ້າວຫັນຈະຕົກລົງສູ່ແດນມໍລະນາ ເຊິ່ງເປັນເຫວເລິກແຫ່ງຄວາມຕາຍ (ແລະຄົນເຫຼົ່ານີ້ຈະທົນທຸກຈາກການຕົກນະຮົກຕະຫຼອດໄປ). ວິທີການໃໝ່ເປັນຄືດັ່ງນີ້: ຖ້າຫົວໃຈ ແລະຄວາມຄິດຂອງເຈົ້າບໍ່ຖືກຕ້ອງ ແລ້ວການພິພາກສາຂອງເຮົາກໍຈະເກີດຂຶ້ນກັບເຈົ້າທັນທີ. ນີ້ລວມທັງການຍຶດຕິດຢູ່ກັບໂລກ, ຄວາມຮັ່ງມີ, ຄອບຄົວ, ສາມີ, ພັນລະຍາ, ລູກໆ, ພໍ່ແມ່, ການກິນ ແລະ ດື່ມ, ເຄື່ອງນຸ່ງ ແລະ ທຸກສິ່ງທີ່ບໍ່ແມ່ນພາກສ່ວນຂອງຂອບເຂດຝ່າຍວິນຍານ. ຄວາມສະຫວ່າງຂອງໄຟຜົນຈະສາມາດເຫັນແຈ້ງຫຼາຍຍິ່ງຂຶ້ນ ນັ້ນກໍຄື ຄວາມຮູ້ສຶກກ່ຽວກັບຊີວິດຈະຍິ່ງຈະແຈ້ງຫຼາຍຂຶ້ນ ແລະ ຈະເຄື່ອນຍ້າຍຢູ່ຕະຫຼອດເວລາ. ໃຜກໍຕາມທີ່ກໍ່ໃຫ້ເກີດການລົບກວນແມ່ນແຕ່ໜ້ອຍດຽວຈະໄດ້ຮັບຄວາມພິນາດລົ້ມລົງຢ່າງຮ້າຍແຮງ ແລະ ຈະລ້າຊ້າຫຼາຍໃນສະໜາມແຂ່ງຂັນແຫ່ງຊີວິດ. ຄົນທີ່ເສີຍເມີຍ ຜູ້ທີ່ບໍ່ສະແຫວງຫາດ້ວຍຄວາມອຸທິດຕົນ ເຮົາຈະປະຖິ້ມໝົດທຸກຄົນ ແລະ ເບິ່ງຂ້າມພວກເຂົາທຸກຄົນໂດຍບໍ່ລະເວັ້ນ. ພວກເຂົາຈະຕ້ອງຖືກເຮັດໃຫ້ທົນທຸກຢູ່ກັບຄວາມພິນາດເປັນເວລາພັນປີ. ສຳລັບຄົນທີ່ສະແຫວງຫາຢ່າງກະຕືລືລົ້ນ ນັ້ນກໍຄື ຄົນທີ່ມຸ່ງໝັ້ນຢູ່ສະເໝີ ເຮົາຈະໂຍນຖິ້ມຄວາມໄຮ້ດຽງສາຂອງພວກເຂົາ ແລະ ເຮັດໃຫ້ພວກເຂົາຊື່ສັດຕໍ່ເຮົາ. ຍິ່ງໄປກວ່ານັ້ນ ພວກເຂົາຈະມີສະຕິປັນຍາ ແລະ ຄວາມສະຫຼາດ ແລະ ດ້ວຍເຫດນັ້ນພວກເຂົາກໍຈະສະແຫວງຫາດ້ວຍຄວາມເຊື່ອຫຼາຍຂຶ້ນ. ເຮົາເພີ່ມການ

ອວຍພອນຂອງເຮົາໃຫ້ກັບລູກຊາຍກົກຂອງເຮົາທຸກຄົນເປັນສອງເທົ່າ ແລະ ຄວາມຮັກຂອງເຮົາຈະມາເຖິງເຈົ້າຢູ່ຕະຫຼອດເວລາ. ເຮົາເຝົ້າເບິ່ງດູແລເຈົ້າ ແລະ ປົກປ້ອງເຈົ້າຢູ່ສະເໝີ ແລະ ເຮົາຈະບໍ່ຍອມໃຫ້ພວກເຈົ້າຕົກຢູ່ໃນດາງແຫຂອງຊາຕານ. ເຮົາໄດ້ເລີ່ມລົງມືປະຕິບັດພາລະກິດຂອງເຮົາທ່າມກາງທຸກຄົນ; ນັ້ນກໍຄື ເຮົາໄດ້ເພີ່ມໂຄງການພາລະກິດອື່ນອີກ. ຄົນເຫຼົ່ານີ້ເປັນຄົນທີ່ຈະໃຫ້ການຮັບໃຊ້ພຣະຄຣິດເປັນເວລາຫຼາຍພັນປີ ແລະ ຜູ້ຄົນຈຳນວນຫຼວງຫຼາຍຈະບຽດກັນເຂົ້າສູ່ອານາຈັກຂອງເຮົາ.

ລູກຊາຍຂອງເຮົາເອີຍ, ພວກເຈົ້າຕ້ອງເພີ່ມທະວີການຝຶກຝົນຂອງພວກເຈົ້າ. ມີພາລະກິດຢ່າງຫຼວງຫຼາຍທີ່ກຳລັງລໍຖ້າພວກເຈົ້າ, ພາລະກິດທີ່ພວກເຈົ້າຕ້ອງປະຕິບັດ ແລະ ເຮັດໃຫ້ສຳເລັດ. ເຮົາພຽງແຕ່ປາຖະໜາໃຫ້ພວກເຈົ້າຮີບຝ້າວເຕີບໂຕເປັນຜູ້ໃຫຍ່ ເພື່ອວ່າພວກເຈົ້າຈະ ສຳເລັດພາລະກິດທີ່ເຮົາໄດ້ຝາກຝັງໄວ້ກັບພວກເຈົ້າ. ນີ້ແມ່ນຄວາມຮັບຜິດຊອບອັນສັກສິດຂອງພວກເຈົ້າ ແລະ ມັນຄືໜ້າທີ່ງພວກເຈົ້າ ຜູ້ທີ່ເປັນລູກຊາຍກົກຂອງເຮົາຄວນປະຕິບັດ. ເຮົາຈະປົກປ້ອງພວກເຈົ້າຈົນພວກເຈົ້າໄປເຖິງປາຍທາງ ແລະ ເຮົາຈະປົກປ້ອງພວກເຈົ້າ ເພື່ອວ່າພວກເຈົ້າຈະໄດ້ຮັບຄວາມສຸກຄຽງຂ້າງເຮົາຕະຫຼອດໄປ! ພວກເຈົ້າແຕ່ລະຄົນຄວນມີຄວາມເຂົ້າໃຈໃນຄວາມຈິງທີ່ເຮົາໄດ້ຈັດກຽມການເສຍສະຫຼະຫຼາຍຢ່າງ ແລະ ຈັດແຈງສະພາບແວດລ້ອມຫຼາຍປະການ, ທຸກຢ່າງແມ່ນເພື່ອເຮັດໃຫ້ພວກເຈົ້າສົມບູນ. ພວກເຈົ້າຕ້ອງຮູ້ຈັກວ່າ ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນການອວຍພອນຂອງເຮົາ, ບໍ່ແມ່ນບໍ? ພວກເຈົ້າລ້ວນແລ້ວແຕ່ເປັນລູກຊາຍອັນເປັນທີ່ຮັກຂອງເຮົາ. ຕາບໃດທີ່ພວກເຈົ້າຮັກເຮົາຢ່າງຈິງໃຈ ແລ້ວເຮົາກໍຈະບໍ່ປະຖິ້ມພວກເຈົ້າແມ່ນແຕ່ຄົນດຽວ, ແຕ່ວ່າສິ່ງນີ້ແມ່ນຂຶ້ນຢູ່ກັບວ່າ ພວກເຈົ້າຈະສາມາດຮ່ວມມືກັບເຮົາໄດ້ຢ່າງສັນຕິ ຫຼື ບໍ່.

# ບົດທີ 67

ລູກຊາຍຂອງເຮົາປາກົດຢ່າງເປີດເຜີຍ ແລະ ຕໍ່ໜ້າທຸກຄົນ. ເຮົາຈະຂ້ຽນຕີຄົນໃດກໍຕາມທີ່ກ້າທ້າທາຍພວກເຂົາແບບເປີດເຜີຍຢ່າງຮຸນແຮງ; ນັ້ນເປັນສິ່ງທີ່ແນ່ນອນ. ມື້ນີ້, ທຸກຄົນທີ່ສາມາດລຸກຂຶ້ນ ແລະ ລ້ຽງດູຄຣິສຕະຈັກ ກໍໄດ້ບັນລຸສະຖານະຂອງລູກຊາຍກົກແລ້ວ ແລະ ຢູ່ຮ່ວມກັບເຮົາຢ່າງມີສະຫງ່າລາສີໃນຕອນນີ້, ທຸກສິ່ງທີ່ເປັນຂອງເຮົາກໍເປັນຂອງພວກເຈົ້າເຊັ່ນກັນ. ເຮົາປະທານຄວາມກະລຸນາຢ່າງເຫຼືອລົ້ນມາເຖິງທຸກຄົນທີ່ຍອມຕໍ່ເຮົາຢ່າງຈິງໃຈ, ເພື່ອເຈົ້າອາດຈະຍິ່ງໃຫຍ່, ຢູ່ເໜືອກຳລັງຂອງມະນຸດຄົນອື່ນໆ. ຄວາມປະສົງທັງໝົດຂອງເຮົາມາເຖິງພວກເຈົ້າ ຜູ້ເຊິ່ງເປັນລູກຊາຍກົກ ແລະ ເຮົາພຽງແຕ່ປາຖະໜາໃຫ້ພວກເຈົ້າເປັນຜູ້ໃຫຍ່ຢ່າງໄວເທົ່າທີ່ຈະໄວໄດ້ ແລະ ເຮັດສິ່ງທີ່ເຮົາຝາກຝັງໄວ້ກັບເຈົ້ານັ້ນໃຫ້ສຳເລັດ. ຈົ່ງຮູ້ສິ່ງນີ້ໄວ້! ສິ່ງທີ່ເຮົາໄດ້ຝາກຝັງໄວ້ກັບພວກເຈົ້າກໍຄືໂຄງການສຸດທ້າຍຂອງແຜນການຄຸ້ມຄອງຂອງເຮົາ. ເຮົາພຽງແຕ່ຫວັງໃຫ້ພວກເຈົ້າສາມາດຖວາຍການເປັນຢູ່ທັງໝົດຂອງເຈົ້າໃຫ້ກັບເຮົາ ດ້ວຍສຸດໃຈ, ສຸດຄວາມຄິດ ແລະ ສຸດກຳລັງຂອງເຈົ້າ ແລະ ເສຍສະຫຼະທຸກສິ່ງເພື່ອເຮົາ. ເວລາບໍ່ໄດ້ລໍຖ້າໃຜແທ້ໆ ແລະ ບໍ່ມີໃຜ, ບໍ່ມີເຫດການໃດ ແລະ ບໍ່ມີສິ່ງໃດສາມາດຂັດຂວາງພາລະກິດຂອງເຮົາໄດ້. ຈົ່ງຮູ້ສິ່ງນີ້ໄວ້! ພາລະກິດຂອງເຮົາຄືບໜ້າຢ່າງລາບລື່ນໂດຍບໍ່ມີການກີດຂວາງໃນທຸກບາດກ້າວ.

ບາດກ້າວຂອງເຮົາຢຽບໄປທົ່ວຈັກກະວານ ແລະ ສຸດປາຍແຜ່ນດິນໂລກ, ຕາຂອງເຮົາກວດສອບແຕ່ລະຄົນຢ່າງສະໝໍ່າສະເໝີ ແລະ ຍິ່ງໄປກວ່ານັ້ນ ເຮົາເຝົ້າເບິ່ງຈັກກະວານໂດຍລວມ. ໃນຄວາມເປັນຈິງແລ້ວ ພຣະທຳຂອງເຮົາດຳເນີນໄປທົ່ວທຸກມຸມຂອງຈັກກະວານ. ໃຜກໍຕາມທີ່ກ້າບໍ່ໃຫ້ບໍລິການແກ່ເຮົາ, ໃຜກໍຕາມທີ່ກ້າບໍ່ຊື່ສັດຕໍ່ເຮົາ, ໃຜກໍຕາມທີ່ກ້າຕັດສິນນາມຂອງເຮົາ ແລະ ໃຜກໍຕາມທີ່ກ້າດ່າ ແລະ ໃສ່ຮ້າຍປ້າຍສີລູກຊາຍຂອງເຮົາ, ຄົນທີ່ສາມາດເຮັດສິ່ງດັ່ງກ່າວແທ້ໆແມ່ນຕ້ອງພະເຊີນກັບການພິພາກສາຢ່າງຮຸນແຮງ. ການພິພາກສາຂອງເຮົາຈະເກີດຂຶ້ນຢ່າງສົມບູນ ເຊິ່ງໝາຍຄວາມວ່າຕອນນີ້ເປັນຍຸກແຫ່ງການພິພາກສາ ແລະ ຜ່ານການສັງເກດຢ່າງລະມັດລະວັງ ເຈົ້າຈະພົບວ່າ ການພິພາກສາຂອງເຮົາແຜ່ຂະຫຍາຍອອກໄປທົ່ວໂລກຈັກກະວານ. ແນ່ນອນ ເຮືອນຂອງເຮົາກໍບໍ່ໄດ້ຖືກລະເວັ້ນ; ການພິພາກສາຈະມາເຖິງຄົນທີ່ມີຄວາມຄິດ, ຄຳເວົ້າ ແລະ ການກະທຳທີ່ບໍ່ສອດຄ່ອງກັບຄວາມປະສົງຂອງເຮົາ. ໃຫ້ເຂົ້າໃຈໄວ້! ການພິພາກສາຂອງເຮົາແນໃສ່ໂລກຈັກກະວານທັງປວງ, ບໍ່ແມ່ນໜຶ່ງກຸ່ມຄົນ ຫຼື ສິ່ງຂອງເທົ່ານັ້ນ. ເຈົ້າເຂົ້າໃຈສິ່ງນີ້ບໍ? ຖ້າເລິກໆໃນພາຍໃນ ເຈົ້າມີແນວຄິດທີ່ຂັດແຍ້ງກ່ຽວກັບເຮົາ, ແລ້ວເຈົ້າກໍຈະຖືກພິພາກສາຢູ່ພາຍໃນທັນທີ.

ການພິພາກສາຂອງເຮົາມາໃນທຸກຮູບແບບ ແລະ ທຸກລັກສະນະ. ຈົ່ງຮູ້ສິ່ງນີ້ໄວ້! ເຮົາເປັນພຣະເຈົ້າໜຶ່ງດຽວ ແລະ ມີສະຕິປັນຍາໃນໂລກຈັກກະວານ! ບໍ່ມີຫຍັງທີ່ຢູ່ເໜືອລິດອຳນາດຂອງເຮົາ. ການພິພາກສາທຸກຢ່າງຂອງເຮົາຖືກເປີດເຜີຍໃຫ້ກັບພວກເຈົ້າ: ຖ້າພວກເຈົ້າມີຄວາມຄິດທີ່ຂັດແຍ້ງກ່ຽວກັບເຮົາ, ເຮົາກໍຈະສ່ອງແສງສະຫວ່າງໃຫ້ແກ່ເຈົ້າ ເພື່ອເປັນການເຕືອນ. ຖ້າເຈົ້າບໍ່ຟັງ, ແລ້ວເຮົາກໍຈະປະຖິ້ມ

ເຈົ້າທັນທີ (ໃນນີ້ ເຮົາບໍ່ໄດ້ໝາຍເຖິງການສິງໄສນາມຂອງເຮົາ, ແຕ່ສິງໄສພິດຕິກຳພາຍນອກທີ່ກ່ຽວຂ້ອງກັບຄວາມສຸກທາງເນື້ອໜັງ). ຖ້າຄວາມຄິດຂອງເຈົ້າທ້າທາຍເຮົາ, ເຈົ້າຕໍ່ວ່າເຮົາ, ຖ້າເຈົ້າຍອມຮັບເອົາແນວຄິດຂອງຊາຕານຄັ້ງແລ້ວຄັ້ງເລົ່າ ແລະ ຖ້າເຈົ້າບໍ່ປະຕິບັດຕາມຄວາມຮູ້ສຶກແຫ່ງຊີວິດ, ແລ້ວວິນຍານຂອງເຈົ້າກໍຈະຢູ່ໃນຄວາມມືດ ແລະ ເນື້ອໜັງຂອງເຈົ້າກໍຈະທົນທຸກກັບຄວາມເຈັບປວດ. ເຈົ້າຕ້ອງຫຍັບເຂົ້າໃກ້ເຮົາຫຼາຍຂຶ້ນ. ເຈົ້າຈະບໍ່ສາມາດຟື້ນຟູສູ່ສະພາບປົກກະຕິຂອງເຈົ້າໃນເວລາໜຶ່ງມື້ ຫຼື ສອງມື້ຢ່າງແນ່ນອນ ແລະ ຊີວິດຂອງເຈົ້າຈະລ້າຊ້າຢ່າງເຫັນໄດ້ຊັດຫຼາຍ. ສຳລັບຄົນທີ່ເວົ້າຢ່າງເສເພເຮົາຈະລົງວິໄນປາກ ແລະ ລີ້ນຂອງພວກເຈົ້າ ແລະ ເຮັດໃຫ້ລີ້ນຂອງພວກເຈົ້າຜະເຊີນກັບການຈັດການ. ຄົນທີ່ກະທຳຢ່າງເສເພໂດຍບໍ່ມີຂອບເຂດ ເຮົາຈະເຕືອນພວກເຈົ້າໃນວິນຍານຂອງພວກເຈົ້າ ແລະ ເຮົາຈະຂ້ຽນຕີຄົນທີ່ບໍ່ຟັງຢ່າງຮຸນແຮງ. ຄົນທີ່ຕັດສິນ ແລະ ທ້າທາຍເຮົາຢ່າງເປີດເຜີຍ ໝາຍເຖິງຄົນທີ່ສະແດງຄວາມບໍ່ເຊື່ອຟັງດ້ວຍຄຳເວົ້າ ຫຼື ດ້ວຍການກະທຳ, ເຮົາຈະກຳຈັດ ແລະ ປະຖິ້ມພວກເຂົາໂດຍສິ້ນເຊີງ, ເຮັດໃຫ້ພວກເຂົາຈິບຫາຍ ແລະ ສູນເສຍພອນສູງສຸດ; ຄົນເຫຼົ່ານີ້ແມ່ນຄົນທີ່ຖືກກຳຈັດຫຼັງຈາກຖືກເລືອກ. ສຳລັບຄົນທີ່ເມີນເສີຍ ໝາຍເຖິງຄົນທີ່ມີນິມິດບໍ່ຊັດເຈນ, ເຮົາຈະສ່ອງແສງສະຫວ່າງໃຫ້ພວກເຂົາ ແລະ ຊ່ວຍພວກເຂົາໃຫ້ລອດພົ້ນ; ເຖິງຢ່າງໃດກໍຕາມ ຄົນທີ່ເຂົ້າໃຈຄວາມຈິງແຕ່ຍັງບໍ່ທັນນຳໄປປະຕິບັດ ກໍຈະຖືກປົກຄອງຕາມກົດລະບຽບທີ່ກ່າວມາຂ້າງເທິງ ບໍ່ວ່າພວກເຂົາຈະເມີນເສີຍ ຫຼື ບໍ່ກໍຕາມ. ແຕ່ສຳລັບຄົນເຫຼົ່ານັ້ນທີ່ມີເຈດຕະນາຜິດຕັ້ງແຕ່ຕອນເລີ່ມຕົ້ນ, ເຮົາຈະເຮັດໃຫ້ພວກເຂົາບໍ່ສາມາດເຂົ້າໃຈຄວາມເປັນຈິງຕະຫຼອດໄປ ແລະ ໃນທີ່ສຸດແລ້ວ ພວກເຂົາກໍຈະຖືກກຳຈັດເທື່ອລະໜ້ອຍ, ເທື່ອລະຄົນ. ບໍ່ມີໃຜທີ່ຈະຄົງຢູ່, ເຖິງແມ່ນວ່າພວກເຂົາຄົງຢູ່ໃນຕອນນີ້ໂດຍການຈັດແຈງຂອງເຮົາ (ຍ້ອນເຮົາບໍ່ເຮັດສິ່ງຕ່າງໆຢ່າງຟ້າວຟັ່ງ, ແຕ່ໃນຮູບແບບທີ່ເປັນລະບົບລະບຽບ).

ການພິພາກສາຂອງເຮົາຖືກເປີດເຜີຍຢ່າງສົມບູນ; ມັນແນໃສ່ຫຼາກຫຼາຍຄົນ ຜູ້ທີ່ຕ້ອງຮັບຕຳແໜ່ງທີ່ເໝາະສົມຂອງພວກເຂົາທັງໝົດ. ເຮົາຈະປົກຄອງ ແລະ ພິພາກສາຜູ້ຄົນຕາມກົດລະບຽບທີ່ພວກເຂົາໄດ້ທຳລາຍ. ແຕ່ສຳລັບຄົນທີ່ບໍ່ໄດ້ຢູ່ໃນນາມນີ້ ແລະ ບໍ່ຍອມຮັບພຣະຄຣິດແຫ່ງຍຸກສຸດທ້າຍ ກໍຈະພຽງກົດລະບຽບດຽວ: ເຮົາຈະເອົາຈິດໃຈ, ວິນຍານ ແລະ ຮ່າງກາຍຂອງຄົນທີ່ທ້າທາຍເຮົາທັນທີ ແລະ ໂຍນພວກເຂົາລົງໃນດິນແດນມໍລະນາ; ໃຜກໍຕາມທີ່ບໍ່ໄດ້ທ້າທາຍເຮົາ, ເຮົາຈະລໍຖ້າໃຫ້ພວກເຈົ້າເຕີບໂຕກ່ອນທີ່ຈະປະຕິບັດການພິພາກສາຄັ້ງທີສອງ. ພຣະທຳຂອງເຮົາອະທິບາຍທຸກສິ່ງຢ່າງຊັດເຈນທີ່ສຸດ ແລະ ບໍ່ມີຫຍັງທີ່ລີ້ລັບ. ເຮົາພຽງແຕ່ຫວັງວ່າ ພວກເຈົ້າຈະສາມາດຈື່ຂຶ້ນໃຈຢູ່ຕະຫຼອດເວລາ!

# ບົດທີ 68

ພຣະທໍາຂອງເຮົາໄດ້ຖືກຈັດຕັ້ງປະຕິບັດໃນທຸກປະເທດ, ທຸກບ່ອນ, ທຸກຊາດ ແລະ ທຸກນິກາຍ; ແລະ ພຣະທໍາຂອງເຮົາໄດ້ສໍາເລັດລົງໃນທຸກມຸມຕາມເວລາທີ່ກໍານົດໄວ້. ໄພພິບັດຕ່າງໆທີ່ເກີດຂຶ້ນຢູ່ທຸກຫົນທຸກແຫ່ງບໍ່ແມ່ນການຕໍ່ສູ້ລະຫວ່າງຜູ້ຄົນ ຫຼື ພວກເຂົາຕໍ່ສູ້ກັນດ້ວຍອາວຸດ. ຫຼັງຈາກນີ້ຈະບໍ່ມີສົງຄາມອີກຕໍ່ໄປ. ທັງໝົດຢູ່ໃນກໍາມືຂອງເຮົາ. ທຸກຄົນຈະພົບກັບການພິພາກສາຂອງເຮົາ ແລະ ຈະສະຫຼາຍໄປໃນທ່າມກາງໄພພິບັດຕ່າງໆ. ໃຫ້ບັນດາຜູ້ທີ່ຕໍ່ຕ້ານເຮົາ ລວມທັງບັນດາຜູ້ທີ່ບໍ່ເອົາໃຈໃສ່ທີ່ຈະຮ່ວມມືກັບເຮົາທົນທຸກກັບຄວາມເຈັບປວດຈາກໄພພິບັດຕ່າງໆ; ປ່ອຍໃຫ້ພວກເຂົາຮ້ອງໄຫ້ ແລະ ກັດແຂ້ວໄປຊົ່ວນິລັນດອນ ແລະ ຢູ່ໃນຄວາມມືດຕະຫຼອດໄປ. ພວກເຂົາຈະບໍ່ມີຊີວິດລອດ. ເຮົາປະຕິບັດດ້ວຍຄວາມກົງໄປກົງມາ ແລະ ດ້ວຍຄວາມຄ່ອງແຄ້ວ ແລະ ເຮົາບໍ່ໄດ້ພິຈາລະນາວ່າໃນອະດີດເຈົ້າເຄີຍມີຄວາມສັດທາຕໍ່ເຮົາຫຼາຍພຽງໃດ; ຕາບໃດທີ່ເຈົ້າຕໍ່ຕ້ານເຮົາ, ມືແຫ່ງການພິພາກສາຂອງເຮົາຈະປ່ອຍຄວາມໂກດຮ້າຍລົງໃສ່ເຈົ້າໂດຍໄວ ໂດຍບໍ່ມີການຊັກຊ້າໃດໆ, ບໍ່ແມ່ນແຕ່ວິນາທີດຽວ ແລະປາສະຈາກຄວາມເມດຕາໃດໆ. ເຮົາໄດ້ເວົ້າມາໂດຍຕະຫຼອດວ່າເຮົາແມ່ນພຣະເຈົ້າທີ່ຮັກສາສັດຈະຂອງເຮົາ. ທຸກໆພຣະທໍາທີ່ເຮົາກ່າວຈະເປັນຈິງ ແລະ ເຮົາຈະເຮັດໃຫ້ພວກເຈົ້າເຫັນມັນທຸກປະການ. ນີ້ແມ່ນຄວາມໝາຍທີ່ແທ້ຈິງໃນການເຂົ້າສູ່ຄວາມເປັນຈິງໃນທຸກສິ່ງ.

ໄພພິບັດຄັ້ງຍິ່ງໃຫຍ່ຈະບໍ່ເກີດຂຶ້ນກັບລູກຊາຍຂອງເຮົາ ແລະ ກັບຄົນທີ່ເຮົາຮັກຢ່າງແນ່ນອນ. ເຮົາຈະເບິ່ງແຍງລູກຊາຍທັງຫຼາຍຂອງເຮົາໃນທຸກຍາມ ແລະ ທຸກເວລາ. ແນ່ນອນ ພວກເຈົ້າຈະບໍ່ຕ້ອງທົນຕໍ່ຄວາມເຈັບປວດ ແລະ ຄວາມທຸກທໍລະມານດັ່ງກ່າວນັ້ນ. ກົງກັນຂ້າມ, ເຫດຜົນຂອງມັນກໍຄືເພື່ອເຮັດໃຫ້ລູກຊາຍຂອງເຮົາສົມບູນແບບ ແລະ ເພື່ອຕື່ມເຕັມພຣະທໍາຂອງເຮົາໃນຕົວພວກເຂົາ. ດ້ວຍເຫດນັ້ນ ພວກເຈົ້າອາດຈະຮັບຮູ້ຄວາມຍິ່ງໃຫຍ່ຂອງເຮົາ, ຈະເລີນເຕີບໂຕໃນຊີວິດຕໍ່ໄປ, ແບກຫາບພາລະຂອງເຮົາໄດ້ໄວຂຶ້ນ ແລະ ອຸທິດຕົວພວກເຈົ້າທັງໝົດສູ່ຄວາມສໍາເລັດໃນແຜນການຄຸ້ມຄອງຂອງເຮົາ. ພວກເຈົ້າຄວນຈະດີໃຈໄປກັບຄວາມຍິນດີ ແລະ ຄວາມສຸກຍ້ອນສິ່ງນີ້. ເຮົາຈະມອບທຸກສິ່ງທຸກຢ່າງໃຫ້ພວກເຈົ້າ ແລະ ອະນຸຍາດໃຫ້ພວກເຈົ້າກໍາອໍານາດ; ເຮົາຈະວາງມັນໄວ້ໃນກໍາມືຂອງພວກເຈົ້າ. ຖ້າມັນເປັນຄວາມຈິງທີ່ວ່າ ລູກຊາຍສືບທອດມໍລະດົກທັງໝົດຂອງພໍ່ເຂົາ, ແລ້ວມັນຍິ່ງຈະເປັນຈິງຫຼາຍສໍ່າໃດສໍາລັບພວກເຈົ້າຜູ້ເປັນລູກຊາຍກົກຂອງເຮົາ? ພວກເຈົ້າໄດ້ຮັບການອວຍພອນຢ່າງແທ້ຈິງ. ແທນທີ່ຈະທົນທຸກທໍລະມານກັບໄພພິບັດອັນຍິ່ງໃຫຍ່, ພວກເຈົ້າຈະຊື່ນຊົມກັບການອວຍພອນຢ່າງນິລັນດອນ. ຊ່າງສະຫງ່າລາສີ! ຊ່າງສະຫງ່າລາສີ!

ເພີ່ມຄວາມໄວຂອງເຈົ້າ ແລະ ຕິດຕາມບາດຍ່າງຂອງເຮົາໄປທຸກຫົນແຫ່ງ ແລະ ທຸກເວລາ; ຢ່າໄດ້ຫຼ້າຫຼັງ. ຈົ່ງປ່ອຍໃຫ້ຫົວໃຈຂອງພວກເຈົ້າເຮັດຕາມຫົວໃຈຂອງເຮົາ ແລະ ຈົ່ງປ່ອຍໃຫ້ຄວາມຄິດຂອງພວກເຈົ້າເປັນໄປຕາມຄວາມຄິດຂອງເຮົາ. ຈົ່ງຮ່ວມມືກັບເຮົາ ແລະ ເປັນໜຶ່ງດຽວດ້ວຍຫົວໃຈ ແລະ ຄວາມຄິດ. ກິນກັບເຮົາ, ອາໄສຢູ່ກັບເຮົາ ແລະ ຍິນດີຮ່ວມກັບເຮົາ. ພອນອັນປະເສີດກໍາລັງລໍຖ້າ

ໃຫ້ພວກເຈົ້າໄດ້ຊື່ນຊົມ ແລະ ຮັບເອົາ. ມີຄວາມອຸດົມສົມບູນອັນຫາທີ່ປຽບບໍ່ໄດ້ຢູ່ພາຍໃນຕົວເຮົາ. ບໍ່ໄດ້ກຽມມັນໄວ້ສຳລັບຄົນອື່ນແມ່ນແຕ່ໜ້ອຍດຽວ; ເຮົາເຮັດສິ່ງນີ້ທັງໝົດກໍເພື່ອບັນດາລູກຊາຍທັງຫຼາຍຂອງເຮົາ.

ປັດຈຸບັນນີ້ ສິ່ງທີ່ເຮົາມີຢູ່ໃນໃຈຂອງເຮົາແມ່ນສິ່ງທີ່ຈະເກີດເປັນຈິງ. ເມື່ອເຖິງເວລາທີ່ເຮົາກ່າວກັບພວກເຈົ້າຈົບລົງ, ເລື່ອງເຫຼົ່ານັ້ນກໍຄົງຈະໄດ້ເຮັດສຳເລັດແລ້ວ. ແທ້ຈິງແລ້ວ, ພາລະກິດດຳເນີນໄປຢ່າງໄວວາ ແລະ ປ່ຽນແປງໄດ້ທຸກໆເວລາ. ຖ້າຄວາມຕັ້ງໃຈຂອງເຈົ້າຊັດເຊພຽງແຕ່ເວລາດຽວ, ປະກົດການ “ຫ່າງເຫີນ” ຈະເກີດຂຶ້ນ ແລະ ເຈົ້າຈະຖືກໂຍນອອກໄປໄກແສນໄກ ແລ້ວສຸດທ້າຍກໍຈະຫ່າງອອກຈາກກະແສນີ້. ຖ້າພວກເຈົ້າບໍ່ສະແຫວງຫາຢ່າງຈິງຈັງ ພວກເຈົ້າຈະເຮັດໃຫ້ຄວາມພະຍາຍາມຢ່າງເຈັບປວດຂອງເຮົານັ້ນເຮັດໄປດ້ວຍໄຮ້ຜົນປະໂຫຍດ. ໃນອະນາຄົດ, ຜູ້ຄົນຈາກປະເທດຕ່າງໆຈະຫຼັ່ງໄຫຼກັນເຂົ້າມາຕະຫຼອດເວລາ: ໃນລະດັບປັດຈຸບັນຂອງພວກເຈົ້າ, ພວກເຈົ້າສາມາດນຳພາພວກເຂົາໄດ້ບໍ? ເຮົາຈະຝຶກພວກເຈົ້າຢ່າງຖີ່ຖ້ວນເພື່ອໃຫ້ກາຍເປັນທະຫານທີ່ດີພາຍໃນເວລາອັນສັ້ນນີ້ ເພື່ອເຮັດໃຫ້ການຝາກຝັງຂອງເຮົາເປັນຈິງ. ເຮົາປາຖະໜາໃຫ້ພວກເຈົ້າສັນລະເສີນພຣະນາມຂອງເຮົາໃນທຸກປະການ ແລະ ເປັນປະຈັກພະຍານອັນປະເສີດໃຫ້ແກ່ເຮົາ. ໃຫ້ບັນດາພວກທີ່ຖືກພວກເຂົາດູຖູກຢືນຢູ່ເໜືອພວກເຂົາໃນວັນນີ້ ເພື່ອນຳພາພວກເຂົາ ແລະ ປົກຄອງພວກເຂົາ. ເຈົ້າເຂົ້າໃຈເຈດຕະນາຂອງເຮົາບໍ? ເຈົ້າຮັບຮູ້ເຖິງຄວາມພະຍາຍາມຢ່າງເຈັບປວດຂອງເຮົາບໍ? ເຮົາເຮັດສິ່ງນີ້ທັງໝົດເພື່ອພວກເຈົ້າ. ມັນພຽງຂຶ້ນຢູ່ກັບວ່າພວກເຈົ້າຈະສາມາດໄດ້ຮັບພອນຂອງເຮົາໄດ້ ຫຼື ບໍ່.

ເຮົາຄືພຣະເຈົ້າຜູ້ຄົ້ນຫາຄວາມຄິດ ແລະ ຫົວໃຈຂອງມະນຸດຊາດ, ເດີນທາງໄປຈົນສຸດຂອບໂລກ. ໃຜແດ່ທີ່ຈະກ້າບໍ່ຮັບໃຊ້ເຮົາ? ມີຄວາມກົດດັນຢ່າງສູງທ່າມກາງບັນດາປະເທດຕ່າງໆ ແລະ ພວກເຂົາຕໍ່ສູ້ຢ່າງຂົມຂື່ນ, ແຕ່ຢ່າງໃດກໍຕາມ ສຸດທ້າຍແລ້ວ ພວກເຂົາຈະບໍ່ໜີພົ້ນຈາກເງື້ອມມືຂອງເຮົາໄດ້. ແນ່ນອນ ເຮົາຈະບໍ່ປ່ອຍໃຫ້ພວກເຂົາອອກໄປຢ່າງງ່າຍດາຍ. ເຮົາຈະນຳພວກເຂົາໄປສູ່ການພິພາກສາເທື່ອລະຄົນອີງຕາມການກະທຳຂອງພວກເຂົາ, ຕາມສະຖານະທາງໂລກ ແລະ ຄວາມເພິ່ງພໍໃຈທາງໂລກ. ເຮົາຈະບໍ່ຍົກເວັ້ນຜູ້ໃດ. ຄວາມໂກດຮ້າຍຂອງເຮົາໄດ້ເລີ່ມຖືກເປີດເຜີຍ ແລະ ມັນຈະຕົກລົງໃສ່ພວກເຂົາທຸກຄົນ. ທັງໝົດຈະເກີດເປັນຈິງກັບພວກເຂົາເທື່ອລະຄົນ ແລະ ພວກເຂົາແມ່ນໄດ້ນຳເອົາສິ່ງເຫຼົ່ານີ້ທັງໝົດມາສູ່ຕົວພວກເຂົາເອງ. ຜູ້ຄົນທີ່ບໍ່ໄດ້ຮູ້ຈັກເຮົາ ແລະ ໝິ່ນປະໝາດເຮົາໃນອະດີດ ຕອນນີ້ຈະພົບກັບການພິພາກສາຂອງເຮົາ. ສ່ວນບັນດາຜູ້ທີ່ໄດ້ຂົ່ມເຫັງລູກໆຂອງເຮົາ, ເຮົາຈະຕີສອນພວກເຂົາເປັນພິເສດອີງຕາມສິ່ງທີ່ພວກເຂົາໄດ້ເວົ້າ ແລະ ໄດ້ເຮັດຜ່ານມາ. ເຮົາຈະບໍ່ຍົກເວັ້ນແມ່ນແຕ່ເດັກນ້ອຍ. ຜູ້ຄົນເຫຼົ່ານີ້ທັງໝົດແມ່ນຕະກູນຂອງຊາຕານ. ເຖິງແມ່ນວ່າພວກເຂົາບໍ່ໄດ້ເວົ້າ ແລະ ເຮັດຫຍັງກໍຕາມ, ຖ້າສ່ວນເລິກໆພວກເຂົາເຊື່ອງຊ້ອນຄວາມກຽດຊັງຕໍ່ລູກໆຂອງເຮົາ, ເຮົາຈະບໍ່ເກັບພວກເຂົາໄວ້ແມ່ນແຕ່ຄົນດຽວ. ເຮົາຈະເຮັດໃຫ້ພວກເຂົາທັງໝົດເຫັນວ່າ ພວກເຮົາບັນດາກຸ່ມຄົນເຫຼົ່ານີ້ຄືຜູ້ທີ່ປົກຄອງ ແລະ ຜູ້ມີອຳນາດໃນວັນນີ້; ມັນບໍ່ແມ່ນພວກເຂົາຢ່າງແນ່ນອນ. ດ້ວຍເຫດນີ້, ມັນຍິ່ງສຳຄັນຫຼາຍກວ່າທີ່ເຈົ້າຈະອຸທິດກຳລັງທັງໝົດຂອງພວກເຈົ້າ ແລະ ສະຫຼະຕົວພວກເຈົ້າເອງໃຫ້ແກ່ເຮົາຢ່າງຈິງໃຈ

ເພື່ອພວກເຈົ້າຈະສັນລະເສີນ ແລະ ເປັນພະຍານໃຫ້ແກ່ພຣະນາມຂອງເຮົາໃນທຸກແຫ່ງຫົນ, ທຸກມຸມ, ທຸກສາສະໜາ, ທຸກນິກາຍ ແລະ ເຜີຍແຜ່ມັນໄປຈົນສຸດຂອບຈັກກະວານທັງໝົດ ແລະ ສຸດແຜ່ນດິນໂລກ!

# ບົດທີ 69

ເມື່ອຄວາມປະສົງຂອງເຮົາຖືກປະກາດອອກມາ, ໃຜກໍຕາມທີ່ກ້າຕໍ່ຕ້ານ ແລະ ໃຜກໍຕາມທີ່ກ້າຕັດສິນ ຫຼື ສົງໄສ, ເຮົາຈະກຳຈັດໃນທັນທີ. ມື້ນີ້, ໃຜກໍຕາມທີ່ບໍ່ປະຕິບັດຕາມຄວາມປະສົງຂອງເຮົາ ຫຼື ໃຜກໍຕາມທີ່ເຮັດຜິດຄວາມປະສົງຂອງເຮົາ ຕ້ອງຖືກໂຍນອອກ ແລະ ກຳຈັດຈາກອານາຈັກຂອງເຮົາ. ໃນອານາຈັກຂອງເຮົາ ບໍ່ມີຄົນອື່ນອີກເລີຍ; ທຸກຄົນເປັນລູກຊາຍຂອງເຮົາ ນັ້ນກໍຄື ຄົນທີ່ເຮົາຮັກ ແລະ ຜູ້ທີ່ຄຳນຶງເຖິງເຮົາ. ຍິ່ງໄປກວ່ານັ້ນ, ພວກເຂົາເປັນຜູ້ທີ່ປະຕິບັດຕາມພຣະທຳຂອງເຮົາ ແລະ ສາມາດປົກຄອງໂດຍມີອຳນາດເພື່ອພິພາກສາທຸກຊົນຊາດ ແລະ ທຸກຄົນແທນເຮົາ. ຍິ່ງໄປກວ່ານັ້ນ, ພວກເຂົາເປັນກຸ່ມຂອງລູກຊາຍກົກ ຜູ້ທີ່ໄຮ້ດຽງສາ ແລະ ມີຊີວິດຊີວາ; ທຳມະດາ ແລະ ເປີດເຜີຍ; ແລະ ທັງຊື່ສັດ ແລະ ມີສະຕິປັນຍາ. ຄວາມປະສົງຂອງເຮົາຖືກເຮັດໃຫ້ສຳເລັດໃນພວກເຈົ້າ ແລະ ສິ່ງທີ່ເຮົາປາຖະໜາຢາກເຮັດແມ່ນຖືກບັນລຸໃນພວກເຈົ້າ, ໂດຍບໍ່ມີຂໍ້ຜິດພາດໃດໆ, ເປີດອອກ ແລະ ເປີດເຜີຍຢ່າງສົມບູນ. ຄົນທີ່ມີເຈດຕະນາ ແລະ ເປົ້າໝາຍຜິດໆ, ເຮົາໄດ້ເລີ່ມປະຖິ້ມພວກເຂົາ ແລະ ເຮົາຈະເຮັດໃຫ້ພວກເຂົາລົ້ມລົງເທື່ອລະຄົນ. ເຮົາຈະທຳລາຍພວກເຂົາເທື່ອລະຄົນຈົນເຖິງຈຸດທີ່ພວກເຂົາບໍ່ສາມາດຢູ່ລອດໄດ້, ແລະ ທຸກສິ່ງນີ້ໝາຍເຖິງຈິດໃຈຂອງພວກເຂົາ, ວິນຍານຂອງພວກເຂົາ ຫຼື ຮ່າງກາຍຂອງພວກເຂົາ.

ໃຫ້ເຂົ້າໃຈວ່າ ການກະທຳຂອງມືເຮົາ ນັ້ນຄື ການຊ່ວຍເຫຼືອຄົນທຸກຍາກ, ດູແລ ແລະ ປົກປ້ອງຄົນທີ່ຮັກເຮົາ, ຊ່ວຍຄົນທີ່ໂງ່ຈ້າ ແລະ ກະຕືລືລົ້ນທີ່ບໍ່ແຊກແຊງກັບການຄຸ້ມຄອງຂອງເຮົາ, ລົງໂທດຄົນທີ່ຕໍ່ຕ້ານເຮົາ ແລະ ຄົນທີ່ບໍ່ຮ່ວມມືກັບເຮົາຢ່າງຫ້າວຫັນ, ທຸກສິ່ງເຫຼົ່ານີ້ຈະຖືກຢືນຢັນເທື່ອລະຢ່າງໂດຍອີງຕາມພຣະຄຳຂອງເຮົາ. ເຈົ້າເປັນຄົນທີ່ຮັກເຮົາແທ້ໆບໍ? ເຈົ້າເປັນຄົນທີ່ເສຍສະຫຼະຕົນເອງເພື່ອເຮົາຢ່າງຊື່ສັດບໍ? ເຈົ້າເປັນຄົນທີ່ຟັງພຣະທຳຂອງເຮົາ ແລະ ປະຕິບັດຕາມນັ້ນບໍ? ເຈົ້າເປັນຄົນທີ່ຕໍ່ຕ້ານເຮົາບໍ ຫຼື ເຈົ້າເປັນຄົນທີ່ສາມາດເຂົ້າກັບເຮົາໄດ້? ເລິກລົງພາຍໃນ ເຈົ້າມີຄວາມຄິດທີ່ຊັດເຈນໃນສິ່ງເຫຼົ່ານີ້ບໍ? ເຈົ້າສາມາດຕອບຄຳຖາມແຕ່ລະຢ່າງທີ່ເຮົາໄດ້ເວົ້າບໍ? ຖ້າເຈົ້າບໍ່ສາມາດຕອບໄດ້, ແລ້ວເຈົ້າກໍເປັນຄົນທີ່ສະແຫວງຫາຢ່າງກະຕືລືລົ້ນ, ແຕ່ບໍ່ເຂົ້າໃຈຄວາມປະສົງຂອງເຮົາ. ຄົນດັ່ງກ່າວຈະແຊກແຊງກັບການຄຸ້ມຄອງຂອງເຮົາຢ່າງງ່າຍດາຍທີ່ສຸດ ແລະ ເຮັດຜິດຄວາມປະສົງຂອງເຮົາ. ຖ້າພວກເຂົາມີເຈດຕະນາຜິດໆແມ່ນແຕ່ໃນຊົ່ວໄລຍະໃດໜຶ່ງ, ພວກເຂົາກໍຈະຕົກຢູ່ໃນການກຳຈັດ ແລະ ການທຳລາຍຂອງເຮົາ.

ໃນເຮົາແມ່ນມີຄວາມເລິກລັບທີ່ບໍ່ສິ້ນສຸດ ເຊິ່ງບໍ່ສາມາດຢັ່ງເຖິງໄດ້. ເຮົາຈະເປີດເຜີຍສິ່ງເຫຼົ່ານັ້ນເທື່ອລະຢ່າງໃຫ້ກັບຜູ້ຄົນຕາມແຜນການຂອງເຮົາ. ນັ້ນກໍຄື ເຮົາຈະເປີດເຜີຍແຜນການເຫຼົ່ານັ້ນຕໍ່ລູກຊາຍກົກຂອງເຮົາ. ສຳລັບຄົນທີ່ບໍ່ເຊື່ອ ແລະ ຄົນທີ່ຕໍ່ຕ້ານເຮົາ, ເຮົາພຽງແຕ່ຈະຍອມໄປຕາມກະແສນໍ້າ, ເຖິງຢ່າງໃດກໍຕາມ ໃນທີ່ສຸດແລ້ວ ເຮົາຈະຕ້ອງເຮັດໃຫ້ພວກເຂົາເຂົ້າໃຈວ່າ ເຮົາຄືຄວາມສະຫງ່າຜ່າເຜີຍ ແລະ ການພິພາກສາ. ຄົນບໍ່ເຊື່ອໃນປັດຈຸບັນພຽງແຕ່ມີຄວາມຮູ້ກ່ຽວກັບສິ່ງທີ່ເກີດຂຶ້ນຕໍ່ຕາ

ຂອງພວກເຂົາ, ແຕ່ພວກເຂົາບໍ່ຮູ້ຈັກຄວາມປະສົງຂອງເຮົາ. ມີພຽງແຕ່ລູກຊາຍຂອງເຮົາເທົ່ານັ້ນ ເຊິ່ງເປັນຄົນທີ່ເຮົາຮັກ ຈຶ່ງຮູ້ຈັກ ແລະ ເຂົ້າໃຈຄວາມປະສົງຂອງເຮົາ. ສຳລັບລູກຊາຍຂອງເຮົາ, ເຮົາຖືກເປີດອອກຢ່າງເປີດເຜີຍ; ສຳລັບຊາຕານແລ້ວ ເຮົາຄືຄວາມສະຫງ່າຜ່າເຜີຍ ແລະ ການພິພາກສາ ແລະ ບໍ່ລີ້ລັບເລີຍ. ທຸກມື້ນີ້ ມີພຽງແຕ່ລູກຊາຍກົກຂອງເຮົາເທົ່ານັ້ນທີ່ສົມຄວນຮູ້ຈັກຄວາມປະສົງຂອງເຮົາ; ບໍ່ມີໃຜອີກທີ່ມີຄຸນສົມບັດ ແລະ ທຸກສິ່ງນີ້ແມ່ນເຮົາໄດ້ຈັດກຽມລ່ວງໜ້າໄວ້ກ່ອນການເນລະມິດສ້າງ. ກ່ອນໜ້ານັ້ນ ເຮົາຈັດແຈງຄົນທີ່ຈະໄດ້ຮັບພອນ ແລະ ຄົນທີ່ຖືກລົງໂທດຢ່າງເໝາະສົມ; ເຮົາຊັດເຈນກ່ຽວກັບສິ່ງນີ້ ແລະ ມື້ນີ້ ມັນຖືກເຮັດໃຫ້ເປັນທີ່ປະຈັກຢ່າງສົມບູນ: ຄົນທີ່ໄດ້ຮັບພອນແມ່ນໄດ້ເລີ່ມຮັບພອນຂອງພວກເຂົາ, ໃນຂະນະຄົນທີ່ຖືກລົງໂທດກໍໄດ້ເລີ່ມທົນທຸກກັບໄພພິບັດ. ຄົນທີ່ບໍ່ປາຖະໜາຈະຖືກລົງໂທດກໍຈະຖືກລົງໂທດ ເພາະນີ້ແມ່ນສິ່ງທີ່ເຮົາກຳນົດໄວ້ ແລະ ສິ່ງທີ່ມືແຫ່ງບົດບັນຍັດບໍລິຫານຂອງເຮົາໄດ້ຈັດແຈງໄວ້. ຄົນປະເພດໃດທີ່ໄດ້ຮັບພອນແທ້ໆ ແລະ ຄົນປະເພດໃດທີ່ຖືກລົງໂທດ? ເຮົາໄດ້ເປີດເຜີຍສິ່ງເຫຼົ່ານີ້ແລ້ວ; ນີ້ບໍ່ແມ່ນຄວາມເລິກລັບສຳລັບພວກເຈົ້າ, ກົງກັນຂ້າມ ມັນຢູ່ຂ້າງນອກໂດຍຖືກເປີດເຜີຍແລ້ວ: ຄົນທີ່ຍອມຮັບເຮົາ ແຕ່ມີເຈດຕະນາຜິດ; ຄົນທີ່ຍອມຮັບເຮົາ ແຕ່ບໍ່ສະແຫວງຫາເຮົາ; ຄົນທີ່ຮູ້ຈັກເຮົາ ແຕ່ບໍ່ຍອມ; ຄົນທີ່ມີສ່ວນຮ່ວມໃນຄວາມບໍ່ຊື່ສັດ ແລະ ຄວາມຫັກຫຼັງເພື່ອຫຼອກລວງເຮົາ; ຄົນທີ່ອ່ານພຣະທຳຂອງເຮົາ ແຕ່ສະແດງຄວາມຄິດລົບອອກມາ; ແລະ ຄົນທີ່ບໍ່ຮູ້ຈັກຕົນເອງ, ຄົນທີ່ບໍ່ຮູ້ວ່າພວກເຂົາແມ່ນຫຍັງ, ຄົນທີ່ຄິດວ່າຕົນເອງຍິ່ງໃຫຍ່ ແລະ ຄົນທີ່ຄິດວ່າພວກເຂົາໄດ້ເປັນຜູ້ໃຫຍ່ແລ້ວ (ຕົວຢ່າງຂອງຊາຕານ), ຄົນເຫຼົ່ານີ້ແມ່ນເປົ້າໝາຍແຫ່ງການລົງໂທດ. ຄົນທີ່ຍອມຮັບເຮົາ ແລະ ມີເຈດຕະນາທີ່ເຫັນແກ່ເຮົາ (ແລະ ຖ້າພວກເຂົາກໍ່ໃຫ້ເກີດການລົບກວນ, ເຮົາຈະບໍ່ຈື່ການລະເມີດຂອງພວກເຂົາ, ແຕ່ເຈດຕະນາຂອງພວກເຂົາຕ້ອງຖືກຕ້ອງ ແລະ ພວກເຂົາຕ້ອງຮອບຄອບຢູ່ສະເໝີ, ລະມັດລະວັງ ແລະ ບໍ່ເສເພ; ແລະ ພວກເຂົາຕ້ອງມີຄວາມປະສົງທີ່ຈະຟັງເຮົາ ແລະ ຍອມຕໍ່ເຮົາ); ຄົນທີ່ບໍລິສຸດ; ຄົນທີ່ເປີດເຜີຍ; ຄົນທີ່ຊື່ສັດ; ຄົນທີ່ບໍ່ຖືກຄວບຄຸມໂດຍຄົນໃດໜຶ່ງ, ສິ່ງໃດໜຶ່ງ ຫຼື ເລື່ອງໃດໜຶ່ງ; ແລະ ຄົນທີ່ມີລັກສະນະເປັນເດັກນ້ອຍ ເຖິງແມ່ນພວກເຂົາເປັນຜູ້ໃຫຍ່ໃນຊີວິດແລ້ວ, ຄົນເຫຼົ່ານີ້ເປັນທີ່ຮັກຂອງເຮົາ, ເປັນເປົ້າໝາຍແຫ່ງພອນຂອງເຮົາ. ບັດນີ້ ພວກເຈົ້າແຕ່ລະຄົນຈະມີຕຳແໜ່ງທີ່ເໝາະສົມເຈົ້າ ໂດຍອີງຕາມສະພາບການຂອງເຈົ້າ. ຍິ່ງໄປກວ່ານັ້ນ ເຈົ້າຈະຮູ້ຈັກວ່າ ເຈົ້າໄດ້ຮັບພອນ ຫຼື ຖືກລົງໂທດ; ບໍ່ຈຳເປັນຕ້ອງໃຫ້ເຮົາເວົ້າອອກຢ່າງຊັດເຈນ. ຄົນທີ່ໄດ້ຮັບພອນຄວນຊື່ນຊົມຍິນດີ ແລະ ມີຄວາມສຸກ, ໃນຂະນະຄົນທີ່ທົນທຸກກັບການລົງໂທດບໍ່ຄວນໂສກເສົ້າ. ທັງສອງຖືກຈັດແຈງໂດຍມືຂອງເຮົາແລ້ວ, ແຕ່ໂທດເຮົາບໍ່ໄດ້: ມັນຄືການທີ່ເຈົ້າເອງຂາດການຮ່ວມມືກັບເຮົາພ້ອມທັງຄວາມລົ້ມເຫຼວຂອງເຈົ້າທີ່ຈະເຂົ້າໃຈວ່າ ເຮົາເປັນພຣະເຈົ້າທີ່ຄົ້ນຫາສ່ວນເລິກສຸດໃນຫົວໃຈຂອງມະນຸດ. ນີ້ແມ່ນສິ່ງທີ່ເຮົາໄດ້ກຳນົດລ່ວງໜ້າ ແລະ ເຈົ້າໄດ້ທຳຮ້າຍຕົນເອງຜ່ານອຸບາຍເລັກໆນ້ອຍໆທີ່ບໍ່ສຳຄັນຂອງເຈົ້າເອງ; ເຈົ້ານຳສິ່ງນີ້ມາສູ່ຕົນເອງ! ການທີ່ເຈົ້າຄວນຕົກລົງສູ່ດິນແດນມໍລະນາກໍບໍ່ແມ່ນການປະຕິບັດຢ່າງທາລຸນຕໍ່ເຈົ້າ! ນີ້ແມ່ນຜົນໄດ້ຮັບຂອງເຈົ້າ; ນີ້ແມ່ນຜົນຕາມມາຂອງເຈົ້າ!

ລູກຊາຍກົກທີ່ໄດ້ຮັບພອນເອີຍ! ຈົ່ງລຸກຂຶ້ນ ແລະ ຮ້ອງໂຮຢ່າງໄວ! ຈົ່ງລຸກຂຶ້ນ ແລະ ສັນລະເສີນ

ຢ່າງໄວ! ຕັ້ງແຕ່ນີ້ຕໍ່ໄປ, ຈະບໍ່ມີຄວາມຂົມຂື່ນອີກຕໍ່ໄປ ແລະ ບໍ່ມີການທົນທຸກອີກຕໍ່ໄປ; ທຸກສິ່ງແມ່ນຢູ່ໃນມືຂອງພວກເຮົາແລ້ວ. ໃຜກໍຕາມທີ່ມີຄວາມຄິດເຂົ້າກັນກັບເຮົາຢ່າງສົມບູນກໍເປັນຄົນທີ່ເຮົາຮັກ ແລະ ຈະບໍ່ຕ້ອງທົນທຸກໄພພິບັດ. ແມ່ນຫຍັງກໍຕາມທີ່ຫົວໃຈຂອງເຈົ້າປາຖະໜາ, ເຮົາຈະເຮັດໃຫ້ມັນສຳເລັດ (ເຖິງແມ່ນມັນບໍ່ສາມາດເປັນໄປຕາມອຳເພີໃຈໄດ້); ນີ້ແມ່ນພາລະກິດຂອງເຮົາ.

# ບົດທີ 70

ການທີ່ຄວາມລຶກລັບຂອງເຮົາຖືກເປີດເຜີຍ ແລະ ສະແດງອອກຢ່າງເປີດເຜີຍ ແລະ ບໍ່ຖືກປິດບັງອີກຕໍ່ໄປນັ້ນ ກໍເນື່ອງມາຈາກພຣະຄຸນ ແລະ ຄວາມເມດຕາຂອງເຮົາທັງນັ້ນ. ຍິ່ງໄປກວ່ານັ້ນ, ການທີ່ພຣະທຳຂອງເຮົາປາກົດຂຶ້ນທ່າມກາງມະນຸດ ແລະ ບໍ່ຖືກປົກປິດໄວ້ອີກຕໍ່ໄປນັ້ນ ກໍເນື່ອງມາຈາກພຣະຄຸນ ແລະ ຄວາມເມດຕາຂອງເຮົາເຊັ່ນກັນ. ເຮົາຮັກທຸກຄົນທີ່ເສຍສະຫຼະຕົວເອງເພື່ອເຮົາ ແລະ ອຸທິດຕົນເພື່ອເຮົາຢ່າງຈິງໃຈ. ເຮົາກຽດຊັງທຸກຄົນທີ່ເກີດຈາກເຮົາ ແຕ່ບໍ່ຮູ້ຈັກເຮົາ ແລະ ເຖິງກັບຕໍ່ຕ້ານເຮົາ. ເຮົາຈະບໍ່ປະຖິ້ມຜູ້ໃດກໍຕາມທີ່ມີຄວາມຈິງໃຈກັບເຮົາ; ກົງກັນຂ້າມ, ເຮົາຈະປະທານພອນໃຫ້ຄົນໆນັ້ນເປັນສອງເທົ່າ. ເຮົາຈະລົງໂທດບັນດາຜູ້ທີ່ເນລະຄຸນ ແລະ ລະເມີດຄວາມເມດຕາຂອງເຮົາເປັນສອງເທົ່າ ແລະ ເຮົາຈະບໍ່ປ່ອຍພວກເຂົາໄປຢ່າງງ່າຍດາຍ. ໃນອານາຈັກຂອງເຮົາ ບໍ່ມີຄວາມຄົດໂກງ ຫຼື ຄວາມຫຼອກລວງ ແລະ ບໍ່ມີຄວາມຮອບຮູ້ໃນທາງໂລກ; ນັ້ນກໍຄື ບໍ່ມີກິ່ນແຫ່ງຄວາມຕາຍ. ກົງກັນຂ້າມ, ທັງໝົດແມ່ນຄວາມຖືກຕ້ອງ ແລະ ຄວາມທ່ຽງທຳ; ທັງໝົດແມ່ນຄວາມບໍລິສຸດ ແລະ ການເປີດເຜີຍໂດຍບໍ່ມີຫຍັງຖືກປິດບັງໄວ້ ຫຼື ປົກປິດໄວ້. ທຸກສິ່ງສົດໃໝ່, ທຸກສິ່ງແມ່ນຄວາມສຸກ ແລະ ທຸກສິ່ງແມ່ນການສັ່ງສອນ. ໃຜກໍຕາມທີ່ຍັງສົ່ງກິ່ນແຫ່ງຄວາມຕາຍອອກມາ ບໍ່ມີທາງທີ່ຈະຢູ່ໃນອານາຈັກຂອງເຮົາໄດ້, ກົງກັນຂ້າມແມ່ນຈະຖືກປົກຄອງດ້ວຍທ່ອນເຫຼັກຂອງເຮົາ. ຄວາມລຶກລັບທັງໝົດທີ່ບໍ່ມີທີ່ສິ້ນສຸດຕັ້ງແຕ່ອະດີດຕະການຈົນເຖິງປັດຈຸບັນ ໄດ້ຖືກເປີດເຜີຍຢ່າງຄົບຖ້ວນໃຫ້ແກ່ພວກເຈົ້າ ເຊິ່ງແມ່ນກຸ່ມຄົນທີ່ຖືກເຮົາຮັບເອົາໃນຍຸກສຸດທ້າຍ. ພວກເຈົ້າບໍ່ຮູ້ສຶກວ່າໄດ້ຮັບພອນບໍ? ຍິ່ງໄປກວ່ານັ້ນ ມື້ທີ່ທຸກສິ່ງຖືກເປີດອອກຢ່າງເປີດເຜີຍແມ່ນມື້ທີ່ພວກເຈົ້າມີສ່ວນໃນການປົກຄອງຂອງເຮົາ.

ກຸ່ມຄົນທີ່ປົກຄອງດັ່ງກະສັດຢ່າງແທ້ຈິງນັ້ນ ຂຶ້ນຢູ່ກັບການກຳນົດໄວ້ລ່ວງໜ້າ ແລະ ການຄັດເລືອກຂອງເຮົາ ແລະ ແນ່ນອນວ່າບໍ່ມີຄວາມປະສົງຂອງມະນຸດຢູ່ໃນສິ່ງນັ້ນ. ໃຜກໍຕາມທີ່ກ້າມີສ່ວນຮ່ວມໃນເລື່ອງນີ້ຕ້ອງໄດ້ທົນທຸກຈາກການໂຈມຕີຂອງມືເຮົາ ແລະ ຄົນດັ່ງກ່າວຈະເປັນເປົ້າໝາຍຂອງໄຟທີ່ລຸກໄໝ້ຂອງເຮົາ; ນີ້ແມ່ນອີກດ້ານໜຶ່ງຂອງຄວາມຊອບທຳ ແລະ ເດຊານຸພາບຂອງເຮົາ. ເຮົາໄດ້ກ່າວໄວ້ວ່າເຮົາປົກຄອງທຸກສິ່ງ, ເຮົາແມ່ນພຣະເຈົ້າທີ່ມີສະຕິປັນຍາ ຜູ້ມີສິດອຳນາດເຕັມທີ່ ແລະ ເຮົາບໍ່ຜ່ອນຜັນໃຫ້ໃຜ; ເຮົາໂຫດຫ້ຽມທີ່ສຸດ ແລະ ໄຮ້ຄວາມຮູ້ສຶກສ່ວນຕົວຢ່າງສິ້ນເຊີງ. ເຮົາປະຕິບັດຕໍ່ຜູ້ໃດຜູ້ໜຶ່ງ (ບໍ່ວ່າເຂົາຈະເວົ້າດີປານໃດກໍຕາມ, ເຮົາກໍຈະບໍ່ປ່ອຍເຂົາໄປ) ດ້ວຍຄວາມຊອບທຳ, ຄວາມຖືກຕ້ອງ ແລະ ຄວາມສະຫງ່າງາມ, ໃນຂະນະດຽວກັນກໍເຮັດໃຫ້ທຸກຄົນສາມາດເຫັນການກະທຳອັນມະຫັດສະຈັນຂອງເຮົາໄດ້ດີຂຶ້ນ ລວມທັງຄວາມໝາຍຂອງການກະທຳຂອງເຮົາ. ເຮົາລົງໂທດວິນຍານຊົ່ວຮ້າຍສຳລັບການກະທຳທຸກຮູບແບບທີ່ພວກມັນກະທຳ, ໂຍນພວກມັນແຕ່ລະຄົນລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ. ເຮົາໄດ້ສຳເລັດພາລະກິດນີ້ກ່ອນເວລາເລີ່ມຕົ້ນ, ປ່ອຍໃຫ້ພວກເຂົາບໍ່ມີຕຳແໜ່ງ, ປ່ອຍໃຫ້ພວກເຂົາບໍ່ມີບ່ອນເຮັດວຽກຂອງພວກເຂົາ. ບໍ່ມີຄົນທີ່ຖືກເລືອກຂອງເຮົາຄົນໃດ, ບັນດາຜູ້ທີ່ຖືກເຮົາກຳນົດໄວ້ລ່ວງໜ້າ ແລະ ຖືກຄັດເລືອກ ສາມາດຖືກຄອບງຳໂດຍວິນຍານຊົ່ວຮ້າຍ ແລະ

ກົງກັນຂ້າມແມ່ນຈະບໍລິສຸດຢູ່ສະເໝີ. ແຕ່ສຳລັບບັນດາຜູ້ທີ່ບໍ່ໄດ້ຖືກເຮົາກຳນົດໄວ້ລ່ວງໜ້າ ແລະ ຄັດເລືອກນັ້ນ, ເຮົາຈະມອບພວກເຂົາໃຫ້ກັບຊາຕານ ແລະ ຈະບໍ່ອະນຸຍາດໃຫ້ພວກເຂົາຄົງຢູ່ອີກຕໍ່ໄປ. ພຣະບັນຍັດບໍລິຫານຂອງເຮົາປະກອບມີຄວາມຊອບທຳຂອງເຮົາ ແລະ ເດຊານຸພາບຂອງເຮົາໃນທຸກໆດ້ານ. ເຮົາຈະບໍ່ປ່ອຍຄົນທີ່ຊາຕານເຮັດວຽກໃສ່ແມ່ນແຕ່ຄົນດຽວ ແຕ່ຈະໂຍນພວກເຂົາຖິ້ມພ້ອມດ້ວຍຮ່າງກາຍຂອງພວກເຂົາລົງສູ່ດິນແດນມໍລະນາ ເພາະວ່າເຮົາກຽດຊັງຊາຕານ. ເຮົາຈະບໍ່ມີທາງປ່ອຍມັນໄປຢ່າງງ່າຍດາຍ ແຕ່ຈະທຳລາຍມັນຢ່າງສິ້ນເຊີງ, ເຮັດໃຫ້ມັນບໍ່ມີໂອກາດປະຕິບັດພາລະກິດຂອງມັນໄດ້ແມ່ນແຕ່ໜ້ອຍເລີຍ. ບັນດາຜູ້ທີ່ຖືກຊາຕານເຮັດໃຫ້ເສື່ອມຊາມຈົນເຖິງລະດັບໃດໜຶ່ງ (ນັ້ນກໍຄືບັນດາຜູ້ທີ່ເປັນເປົ້າໝາຍຂອງຄວາມຈິບຫາຍ) ແມ່ນຢູ່ພາຍໃຕ້ການຈັດແຈງທີ່ມີສະຕິປັນຍາຂອງມືເຮົາເອງ. ຢ່າຄິດວ່າເລື່ອງນີ້ໄດ້ເກີດຂຶ້ນເນື່ອງມາຈາກຄວາມໂຫດຮ້າຍຂອງຊາຕານ; ຈົ່ງຮູ້ໄວ້ວ່າ ເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດທີ່ປົກຄອງຈັກກະວານ ແລະ ສິ່ງທັງປວງ! ສຳລັບເຮົາແລ້ວ ບໍ່ມີບັນຫາໃດທີ່ບໍ່ສາມາດຖືກແກ້ໄຂໄດ້ ແລະ ແຮງໄກທີ່ຈະມີສິ່ງໃດທີ່ບໍ່ສາມາດຖືກເຮັດສຳເລັດໄດ້ ຫຼື ພຣະທຳໃດທີ່ບໍ່ສາມາດຖືກກ່າວໄດ້. ມະນຸດຕ້ອງບໍ່ເຮັດໜ້າທີ່ເປັນທີ່ປຶກສາຂອງເຮົາ. ໃຫ້ລະວັງທີ່ຈະຖືກມືຂອງເຮົາໂຈມຕີລົງ ແລະ ໂຍນລົງສູ່ແດນມໍລະນາ. ເຮົາບອກສິ່ງນີ້ກັບເຈົ້າ! ບັນດາຜູ້ທີ່ຮ່ວມມືກັບເຮົາຢ່າງຫ້າວຫັນໃນມື້ນີ້ແມ່ນຜູ້ທີ່ມີສະຕິປັນຍາຫຼາຍທີ່ສຸດ ແລະ ພວກເຂົາຈະຫຼີກຫຼ່ຽງການສູນເສຍ ແລະ ຫຼີບໜີຈາກຄວາມເຈັບປວດຂອງການພິພາກສາ. ທັງໝົດນີ້ແມ່ນການຈັດແຈງຂອງເຮົາ ເຊິ່ງໄດ້ຖືກເຮົາກຳນົດໄວ້ລ່ວງໜ້າແລ້ວ. ຢ່າກ່າວຄວາມຄິດເຫັນທີ່ບໍ່ສົມຄວນ ແລະ ຢ່າເວົ້າຢ່າງຂີ້ໂມ້ ໂດຍຄິດວ່າເຈົ້ານັ້ນຍິ່ງໃຫຍ່ຫຼາຍ. ທັງໝົດນີ້ບໍ່ແມ່ນຜ່ານການກຳນົດໄວ້ລ່ວງໜ້າຂອງເຮົາບໍ? ເຈົ້າຜູ້ທີ່ຈະເປັນທີ່ປຶກສາຂອງເຮົາ ຊ່າງບໍ່ຮູ້ຈັກຄວາມອັບອາຍເລີຍ! ເຈົ້າບໍ່ຮູ້ຈັກວຸດທິພາວະຂອງຕົວເຈົ້າເອງ; ມັນຊ່າງມີໜ້ອຍຢ່າງໜ້າສົມເພດແທ້ໆ! ປານນັ້ນກໍດີ, ເຈົ້າຄິດວ່ານີ້ບໍ່ແມ່ນເລື່ອງໃຫຍ່ ແລະ ບໍ່ຮູ້ຈັກຕົວເອງ. ເວລາຜ່ານໄປ, ເຈົ້າປີ້ນຫູໜວກໃສ່ພຣະທຳຂອງເຮົາ, ເຮັດໃຫ້ຄວາມພະຍາຍາມອັນພາກພຽນຂອງເຮົານັ້ນໄຮ້ປະໂຫຍດ ແລະ ບໍ່ຮັບຮູ້ເລີຍວ່າພວກມັນທັງໝົດແມ່ນການສະແດງອອກເຖິງພຣະຄຸນ ແລະ ຄວາມເມດຕາຂອງເຮົາ. ກົງກັນຂ້າມ, ເຈົ້າພະຍາຍາມອວດອ້າງຄວາມສະຫຼຽວສະຫຼາດຂອງຕົວເຈົ້າເອງຊໍ້າແລ້ວຊໍ້າອີກ. ເຈົ້າຈື່ສິ່ງນີ້ໄດ້ບໍ? ຄົນຕ້ອງໄດ້ຮັບການຂ້ຽນຕີຫຍັງ, ໃຜຄິດວ່າພວກເຂົາສະຫຼາດຫຼາຍ? ໂດຍບໍ່ໃສ່ໃຈ ແລະ ບໍ່ສັດຊື່ຕໍ່ພຣະທຳຂອງເຮົາ ແລະ ບໍ່ສະຫຼັກພວກມັນເຂົ້າໃນຫົວໃຈຂອງພວກເຈົ້າ, ພວກເຈົ້າໃຊ້ເຮົາເປັນຂໍ້ອ້າງເພື່ອເຮັດສິ່ງນີ້ ແລະ ສິ່ງນັ້ນ. ຜູ້ເຮັດການຊົ່ວຮ້າຍເອີຍ! ເມື່ອໃດພວກເຈົ້າຈຶ່ງຈະສາມາດຄຳນຶງເຖິງຫົວໃຈຂອງເຮົາໄດ້ຢ່າງເຕັມທີ່? ພວກເຈົ້າບໍ່ໄດ້ຄຳນຶງເຖິງມັນເລີຍດັ່ງນັ້ນການເອີ້ນພວກເຈົ້າວ່າ "ຜູ້ເຮັດການຊົ່ວຮ້າຍ" ກໍບໍ່ແມ່ນປະຕິບັດຕໍ່ພວກເຈົ້າຢ່າງຜິດໆ. ມັນເໝາະສົມກັບພວກເຈົ້າຢ່າງສົມບູນແບບ!

ມື້ນີ້ເຮົາກຳລັງສະແດງໃຫ້ພວກເຈົ້າເຫັນສິ່ງທີ່ຄັ້ງໜຶ່ງໄດ້ຖືກປົດບັງໄວ້ເທື່ອລະອັນ. ມັງກອນແດງຜູ້ຍິ່ງໃຫຍ່ຖືກໂຍນລົງລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ ແລະ ຖືກທຳລາຍຢ່າງສິ້ນເຊີງ ເພາະວ່າການເກັບມັນໄວ້ກໍຈະບໍ່ປະໂຫຍດຫຍັງເລີຍ; ນີ້ໝາຍຄວາມວ່າ ມັນບໍ່ສາມາດເຮັດການບໍລິການໃຫ້ພຣະຄຣິດໄດ້.

ຕໍ່ຈາກນີ້, ສິ່ງຕ່າງໆທີ່ເປັນສີແດງຈະບໍ່ມີຢູ່ອີກຕໍ່ໄປ; ພວກມັນຕ້ອງຄ່ອຍຫາຍໄປຈົນໝົດ. ເຮົາເຮັດໃນສິ່ງທີ່ເຮົາກ່າວ; ນີ້ແມ່ນຄວາມສຳເລັດຂອງພາລະກິດຂອງເຮົາ. ກຳຈັດແນວຄວາມຄິດຂອງມະນຸດ; ທຸກສິ່ງທີ່ເຮົາໄດ້ກ່າວ ເຮົາກໍໄດ້ກະທຳແລ້ວ. ຜູ້ໃດກໍຕາມທີ່ພະຍາຍາມຈະເປັນຄົນສະຫຼາດນັ້ນ ກໍພຽງແຕ່ນຳເອົາຄວາມພິນາດ ແລະ ການດູຖູກມາສູ່ຕົນເອງ ແລະ ບໍ່ຕ້ອງການມີຊີວິດຢູ່. ສະນັ້ນ ເຮົາຈະເຮັດໃຫ້ເຈົ້າພໍໃຈ ແລະ ຈະບໍ່ເກັບຮັກສາຄົນເຊັ່ນນັ້ນໄວ້ຢ່າງແນ່ນອນ. ຕໍ່ຈາກນີ້ໄປ ປະຊາກອນຈະເພີ່ມຂຶ້ນໃນຄວາມດີເລີດ ໃນຂະນະທີ່ທຸກຄົນທີ່ບໍ່ຮ່ວມມືກັບເຮົາຢ່າງຫ້າວຫັນຈະຖືກກວາດລ້າງໄປສູ່ຄວາມວ່າງເປົ່າ. ບັນດາຜູ້ທີ່ເຮົາໄດ້ຮອງຮັບແມ່ນຜູ້ທີ່ເຮົາຈະເຮັດໃຫ້ສົມບູນ ແລະ ເຮົາຈະບໍ່ປະຖິ້ມແມ່ນແຕ່ຄົນດຽວ. ບໍ່ມີຄວາມຂັດແຍ້ງໃນສິ່ງທີ່ເຮົາກ່າວ. ບັນດາຜູ້ທີ່ບໍ່ຮ່ວມມືກັບເຮົາຢ່າງຫ້າວຫັນຈະທົນທຸກກັບການຂ້ຽນຕີຫຼາຍຂຶ້ນ ເຖິງແມ່ນວ່າໃນທີ່ສຸດແລ້ວ ເຮົາຈະຊ່ວຍພວກເຂົາໃຫ້ລອດພົ້ນຢ່າງແນ່ນອນ. ແນວໃດກໍຕາມ, ເມື່ອຮອດເວລານັ້ນ ຂອບເຂດຊີວິດຂອງພວກເຂົາຈະຂ້ອນຂ້າງແຕກຕ່າງກັນ. ເຈົ້າຕ້ອງການເປັນຄົນເຊັ່ນນັ້ນບໍ? ຈົ່ງລຸກຂຶ້ນ ແລະ ຮ່ວມມືກັບພຣະເຈົ້າ! ແນ່ນອນ ເຮົາຈະບໍ່ປະຕິບັດຢ່າງບໍ່ຍຸຕິທຳຕໍ່ຜູ້ທີ່ເສຍສະຫຼະຕົວເອງເພື່ອເຮົາຢ່າງຈິງໃຈ. ສ່ວນບັນດາຜູ້ທີ່ອຸທິດຕົວເອງເພື່ອເຮົາຢ່າງຈິງຈັງນັ້ນ, ເຮົາຈະປະທານພອນທັງໝົດຂອງເຮົາໃຫ້ແກ່ເຈົ້າ. ຈົ່ງຖວາຍຕົນເອງໃຫ້ກັບເຮົາຢ່າງສິ້ນເຊີງ! ສິ່ງທີ່ເຈົ້າກິນ, ສິ່ງທີ່ເຈົ້ານຸ່ງຫົ່ມ ແລະ ອະນາຄົດຂອງເຈົ້າລ້ວນຢູ່ໃນມືຂອງເຮົາ; ເຮົາຈະຈັດແຈງທຸກສິ່ງຢ່າງເໝາະສົມ ເພື່ອວ່າເຈົ້າຈະສາມາດມີຄວາມສຸກຢ່າງບໍ່ສິ້ນສຸດ ເຊິ່ງເຈົ້າຈະບໍ່ມີວັນໃຊ້ໝົດຈັກເທື່ອ. ນີ້ກໍຍ້ອນເຮົາໄດ້ກ່າວໄວ້ວ່າ "ສຳລັບຄົນທີ່ເສຍສະຫຼະເພື່ອເຮົາຢ່າງຈິງໃຈ, ເຮົາຈະອວຍພອນເຈົ້າຢ່າງຫຼວງຫຼາຍແນ່ນອນ". ພອນທັງໝົດຈະມາສູ່ທຸກຄົນທີ່ເສຍສະຫຼະຕົວເອງເພື່ອເຮົາຢ່າງຈິງໃຈ.

# ບົດທີ 71

ເຮົາໄດ້ເຮັດໃຫ້ທັງໝົດຂອງເຮົາເປັນທີ່ປະຈັກຕໍ່ພວກເຈົ້າທຸກຄົນແລ້ວ, ແຕ່ເປັນຫຍັງພວກເຈົ້າຈຶ່ງບໍ່ໄຕ່ຕອງພຣະທຳຂອງເຮົາດ້ວຍຫົວໃຈ ແລະ ວິນຍານທັງໝົດຂອງພວກເຈົ້າ? ເປັນຫຍັງເຈົ້າຈຶ່ງເຮັດຄືກັບພຣະທຳຂອງເຮົາເປັນຂີ້ເຫຍື້ອ? ສິ່ງທີ່ເຮົາເວົ້າບໍ່ຖືກຕ້ອງບໍ? ພຣະທຳຂອງເຮົາໄດ້ໂຈມຕີຖືກສ່ວນສຳຄັນຂອງພວກເຈົ້າບໍ? ພວກເຈົ້າຊັກຊ້າ ແລະ ລັງເລຢ່າງເປັນປະຈຳ? ເປັນຫຍັງເຮົາຈຶ່ງປະພຶດໃນລັກສະນະນີ້? ເຮົາບໍ່ໄດ້ກ່າວຢ່າງຊັດເຈນບໍ? ເຮົາໄດ້ກ່າວຫຼາຍເທື່ອແລ້ວວ່າ ພຣະທຳຂອງເຮົາຄວນໄດ້ຮັບການໄຕ່ຕອງຢ່າງລະມັດລະວັງ ແລະ ພວກເຈົ້າຄວນເອົາໃຈໃສ່ພຣະທຳເຫຼົ່ານັ້ນຢ່າງໃກ້ຊິດ. ມີຄົນໃດທ່າມກາງພວກເຈົ້າທີ່ເປັນລູກທີ່ເຊື່ອຟັງ ແລະ ອ່ອນນ້ອມບໍ? ພຣະທຳຂອງເຮົາສູນເປົ່າບໍ? ພວກມັນບໍ່ມີຜົນເລີຍ ແມ່ນບໍ? ມີຫຼາຍສໍ່າໃດໃນຕົວເຈົ້າທີ່ສາມາດສອດຄ່ອງກັບຄວາມປະສົງຂອງເຮົາ? ຖ້າເຈົ້າໄປໂດຍບໍ່ຖືກກ່າວເຖິງແມ່ນແຕ່ຊ່ວງເວລາໃດໜຶ່ງ, ແລ້ວເຈົ້າກໍເລີ່ມເສເພ ແລະ ບໍ່ຖືກຄວບຄຸມ. ຖ້າເຮົາບໍ່ລະບຸວິທີປະຕິບັດ ແລະ ເວົ້າຢ່າງຊັດເຈນ, ແລ້ວມັນເປັນໄປໄດ້ບໍວ່າ ເລິກໆໃນພາຍນອກ ເຈົ້າກໍຈະບໍ່ຮູ້ຫຍັງ? ໃຫ້ເຮົາບອກເຈົ້າ! ຄົນທີ່ທົນທຸກກັບການສູນເສຍແມ່ນຄົນທີ່ບໍ່ເຊື່ອຟັງ, ຜູ້ທີ່ບໍ່ຍອມຈຳນົນ ແລະ ຜູ້ທີ່ເຊື່ອຢ່າງໂງ່ຈ້າ! ຄົນໜຶ່ງບໍ່ໃສ່ໃຈໃນສິ່ງທີ່ເຮົາເວົ້າ ແລະ ບໍ່ສາມາດເຂົ້າໃຈລາຍລະອຽດກໍຈະບໍ່ສາມາດຢັ່ງເຖິງເຈດຕະນາຂອງເຮົາໄດ້ ຫຼື ພວກເຂົາຈະບໍ່ສາມາດຮັບໃຊ້ເຮົາໄດ້. ຄົນປະເພດນີ້ຈະຖືກເຮົາຈັດການ ແລະ ຈະພົບກັບການພິພາກສາຂອງເຮົາ. ການບໍ່ເຂົ້າໃຈລາຍລະອຽດກໍຄືຄວາມໜ້າດ້ານຫຼາຍ ພ້ອມທັງຄວາມເຈດຕະນາບໍ່ຮອບຄອບ; ສະນັ້ນ ເຮົາຈຶ່ງກຽດຊັງຄົນປະເພດນີ້ ແລະ ບໍ່ໃຈເຢັນໆຕໍ່ພວກເຂົາ. ເຮົາຈະບໍ່ສະແດງຄວາມເມດຕາໃຫ້ກັບພວກເຂົາເລີຍ; ເຮົາຈະສະແດງພຽງແຕ່ຄວາມສະຫງ່າຜ່າເຜີຍ ແລະ ການພິພາກສາຂອງເຮົາຕໍ່ພວກເຂົາ. ແລ້ວເບິ່ງວ່າເຈົ້າຍັງກ້າຫຼອກລວງເຮົາຢູ່ ຫຼື ບໍ່. ເຮົາເປັນພຣະເຈົ້າທີ່ກວດສອບສ່ວນເລິກທີ່ສຸດໃນຫົວໃຈຂອງມະນຸດ. ປະເດັນນີ້ຄວນເຮັດໃຫ້ຊັດເຈນຕໍ່ທຸກຄົນ; ບໍ່ດັ່ງນັ້ນ ພວກເຂົາຈະເຮັດພາລະກິດຂອງພວກເຂົາໃນລັກສະນະຕາມອຳເພີໃຈ ແລະ ເຮັດກັບເຮົາພໍເປັນພິທີ. ນີ້ແມ່ນເຫດຜົນທີ່ວ່າ ເປັນຫຍັງບາງຄົນຈຶ່ງຖືກເຮົາຕີໃຫ້ລົ້ມລົງໂດຍບໍ່ຮູ້ຕົວ. ເຮົາໄດ້ກ່າວວ່າ ເຮົາຈະບໍ່ປະຕິບັດຕໍ່ໃຜກໍຕາມຢ່າງບໍ່ຍຸຕິທຳ, ເຮົາຈະບໍ່ເຮັດສິ່ງທີ່ຜິດ ແລະ ການກະທຳທັງໝົດຂອງເຮົາແມ່ນສອດຄ່ອງກັບການຈັດແຈງທີ່ມີສະຕິປັນຍາໂດຍມືຂອງເຮົາ.

ການພິພາກສາໄດ້ເກີດກັບທຸກຄົນທີ່ບໍ່ຮັກເຮົາຢ່າງແທ້ຈິງ. ໃນເວລານີ້ເອງທີ່ມັນຊັດເຈນວ່າແມ່ນໃຜທີ່ເຮົາໄດ້ກຳນົດລ່ວງໜ້າ ແລະ ໄດ້ເລືອກ ແລະ ແມ່ນໃຜທີ່ຈະຖືກໂຍນອອກ. ສິ່ງເຫຼົ່ານີ້ແມ່ນຖືກເປີດເຜີຍເທື່ອລະຢ່າງ ແລະ ບໍ່ມີຫຍັງລີ້ລັບເລີຍ. ທຸກຄົນ, ທຸກເຫດການ ແລະ ທຸກສິ່ງຕັ້ງຢູ່ ແລະ ມີຢູ່ເພື່ອນຳພຣະທຳຂອງເຮົາໄປສູ່ຄວາມສຳເລັດ ແລະ ມີຢູ່ເພື່ອເຮັດໃຫ້ພຣະຄຳທີ່ກ່າວອອກຈາກປາກຂອງເຮົານັ້ນກາຍເປັນຈິງ. ມືຂອງເຮົາຄວບຄຸມຈັກກະວານ ແລະ ສຸດປາຍແຜ່ນດິນໂລກ. ເຮົາຈະຕີໃຜກໍຕາມທີ່ກ້າບໍ່ເຊື່ອຟັງພຣະທຳຂອງເຮົາ ຫຼື ປະຕິເສດທີ່ຈະປະກາດໃຊ້ການກະທຳຂອງເຮົາ, ເຮັດໃຫ້ຄົນນັ້ນຈົມລົງສູ່ດິນແດນມໍລະນາ ແລະ ເຊົາມີຊີວິດ. ພຣະທຳຂອງເຮົາທຸກຂໍ້ແມ່ນເໝາະສົມ ແລະ ຖືກຕ້ອງ

ແລະ ປາສະຈາກມົນທິນໃດໆ. ລັກສະນະການເວົ້າຂອງພວກເຈົ້າສາມາດຄ້າຍຄືກັບຂອງເຮົາໄດ້ບໍ? ເຈົ້າເວົ້າຍືດຍາວຈົນໜ້າເບື່ອ; ເຈົ້າບໍ່ມີເຫດຜົນ ແລະ ບໍ່ອະທິບາຍຕົນເອງຢ່າງຊັດເຈນ, ແຕ່ເຈົ້າກໍຍັງຄິດວ່າເຈົ້າໄດ້ຮັບເອົາບາງສິ່ງ ແລະ ເຈົ້າເກືອບໄດ້ຮັບມັນ. ໃຫ້ເຮົາບອກເຈົ້າ! ຍິ່ງຄົນພໍໃຈໃນຕົນເອງຫຼາຍສໍ່າໃດ, ພວກເຂົາຍິ່ງຫ່າງໄກຈາກການບັນລຸມາດຕະຖານຂອງເຮົາສໍ່ານັ້ນ. ພວກເຂົາບໍ່ຄຳນຶງເຖິງຄວາມປະສົງຂອງເຮົາ ແລະ ພວກເຂົາຫຼອກລວງເຮົາ ແລະ ທຳລາຍນາມຂອງເຮົາຢ່າງໂຫດຮ້າຍທີ່ສຸດ! ຊ່າງບໍ່ມີຢາງອາຍ! ເຈົ້າບໍ່ເບິ່ງວ່າເຈົ້າມີວຸດທິພາວະແບບໃດເລີຍ. ເຈົ້າຊ່າງໂງ່ຈ້າ ແລະ ບໍ່ມີຄວາມຮູ້ເລີຍ!

ພຣະທຳຂອງເຮົາຊີ້ໃຫ້ເຫັນສິ່ງຕ່າງໆຢ່າງສະໝໍ່າສະເໝີ ແລະ ໃນທຸກລັກສະນະ. ມັນເປັນໄປໄດ້ບໍວ່າເຈົ້າຍັງບໍ່ເຂົ້າໃຈ? ເຈົ້າຍັງບໍ່ເຂົ້າໃຈບໍ? ມັນຄືເຈດຕະນາຂອງເຈົ້າບໍທີ່ຈະເຮັດໃຫ້ເຮົາຜິດຫວັງບໍ? ຈົ່ງເຮັດໃຫ້ວິນຍານຂອງເຈົ້າເຂັ້ມແຂງ ແລະ ເພີ່ມຄວາມກ້າຫານຂອງເຈົ້າ. ເຮົາບໍ່ປະຕິບັດຕໍ່ໃຜກໍຕາມທີ່ຮັກເຮົາຢ່າງບໍ່ຍຸຕິທຳ. ເຮົາກວດສອບສ່ວນເລິກສຸດໃນຫົວໃຈຂອງມະນຸດ ແລະ ເຮົາຮູ້ຈັກທຸກສິ່ງທີ່ຢູ່ໃນຫົວໃຈຂອງທຸກຄົນ. ທຸກສິ່ງເຫຼົ່ານີ້ຈະຖືກເປີດເຜີຍເທື່ອລະໜ້ອຍ ແລະ ພວກມັນຈະຖືກກວດສອບໂດຍເຮົາ. ເຮົາຈະບໍ່ເບິ່ງຂ້າມໃຜກໍຕາມທີ່ຮັກເຮົາຢ່າງແທ້ຈິງຈັກເທື່ອ; ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ຈະໄດ້ຮັບພອນຂອງເຮົາ ແລະ ເປັນກຸ່ມຂອງລູກຊາຍກົກທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າໃຫ້ເປັນກະສັດ. ແຕ່ສຳລັບຄົນທີ່ບໍ່ຮັກເຮົາຢ່າງແທ້ຈິງ, ພວກເຂົາກໍເປັນເປົ້າໝາຍຂອງອຸບາຍຂອງພວກເຂົາເອງ ແລະ ຈະທົນທຸກກັບຄວາມໂຊກຮ້າຍ; ສິ່ງນີ້ກໍຖືກກຳນົດໄວ້ລ່ວງໜ້າໂດຍເຮົາເຊັ່ນກັນ. ຢ່າກັງວົນເລີຍ; ເຮົາຈະເປີດເຜີຍສິ່ງເຫຼົ່ານັ້ນເທື່ອລະໜ້ອຍ. ເຮົາໄດ້ເປີດເຜີຍພວກມັນເທື່ອລະຢ່າງ. ເຮົາໄດ້ຈັດກຽມພາລະກິດນີ້ໄວ້ລ່ວງໜ້າເປັນຢ່າງດີ ແລະ ເຮົາໄດ້ເລີ່ມຕົ້ນປະຕິບັດພາລະກິດນີ້. ມັນເກີດຂຶ້ນໃນລັກສະນະທີ່ເປັນລະບົບລະບຽບທັງໝົດ; ມັນບໍ່ໄດ້ວຸ້ນວາຍເລີຍ. ເຮົາໄດ້ຕັດສິນໃຈແລ້ວວ່າ ແມ່ນໃຜທີ່ຖືກເລືອກ ແລະ ແມ່ນໃຜທີ່ຖືກກຳຈັດ. ສິ່ງເຫຼົ່ານີ້ຈະຖືກເປີດເຜີຍໃຫ້ພວກເຈົ້າໄດ້ເຫັນເທື່ອລະໜ້ອຍ. ໃນລະຫວ່າງເວລາເຫຼົ່ານີ້ ພວກເຈົ້າຈະເຫັນວ່າມືຂອງເຮົາກຳລັງເຮັດຫຍັງຢູ່. ທຸກຄົນຈະເຫັນວ່າ ຄວາມຊອບທຳ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາຈະບໍ່ຍອມໃຫ້ໃຜກໍຕາມລ່ວງເກີນ ຫຼື ຕໍ່ຕ້ານ ແລະ ໃຜກໍຕາມທີ່ລ່ວງເກີນກໍຈະຖືກລົງໂທດຢ່າງຮຸນແຮງ.

ເຮົາເປັນຜູ້ທີ່ຊອກຫາສ່ວນເລິກສຸດໃນຫົວໃຈຂອງທຸກຄົນຢ່າງສະໝໍ່າສະເໝີ. ຢ່າເບິ່ງເຮົາຈາກພາຍນອກເທົ່ານັ້ນ. ຜູ້ຄົນທີ່ຕາບອດເອີຍ! ພວກເຈົ້າບໍ່ຟັງພຣະທຳທີ່ເຮົາໄດ້ກ່າວໄວ້ຢ່າງຊັດເຈນຫຼາຍ ແລະ ພວກເຈົ້າບໍ່ເຊື່ອເຮົາໂດຍສິ້ນເຊີງ ຜູ້ທີ່ເປັນພຣະເຈົ້າທີ່ສົມບູນແບບ. ເຮົາຈະບໍ່ທົນຕໍ່ຜູ້ໃດກໍຕາມທີ່ກ້າລໍ້ລວງ ຫຼື ປິດບັງຫຍັງກໍຕາມຈາກເຮົາ.

ເຈົ້າຈື່ພຣະຄຳທຸກຂໍ້ຂອງເຮົາໄດ້ບໍ? "ການເຫັນເຮົາກໍຄືກັບການເຫັນຄວາມເລິກລັບທຸກຢ່າງທີ່ລີ້ລັບຢູ່ສືບໆໄປ". ເຈົ້າໄດ້ໄຕ່ຕອງຄຳເວົ້ານີ້ຢ່າງລະມັດລະວັງບໍ? ເຮົາເປັນພຣະເຈົ້າ ແລະ ຄວາມເລິກລັບຂອງເຮົາຖືກສຳແດງອອກໃຫ້ພວກເຈົ້າໄດ້ເຫັນ. ພວກເຈົ້າບໍ່ເຫັນຄວາມເລິກລັບເຫຼົ່ານັ້ນບໍ? ເປັນຫຍັງເຈົ້າຈຶ່ງສົນໃຈເຮົາ? ແລ້ວເປັນຫຍັງເຈົ້າຈຶ່ງນະມັດສະການພຣະເຈົ້າທີ່ເລື່ອນລອຍທີ່ຢູ່ໃນຄວາມຄິດຂອງເຈົ້າແບບນັ້ນ? ເຮົາ ຜູ້ເຊິ່ງເປັນພຣະເຈົ້າທີ່ແທ້ຈິງອົງດຽວຈະເຮັດສິ່ງທີ່ຜິດໄດ້ແນວໃດ? ເອົາສິ່ງນີ້ຜ່ານ

ສະໜອງຂອງເຈົ້າແມະ! ໃຫ້ໝັ້ນໃຈໃນສິ່ງນັ້ນ! ພຣະທຳ ແລະ ການກະທຳທຸກຢ່າງຂອງເຮົາ, ການປະພຶດ ແລະ ການເຄື່ອນໄຫວທຸກຢ່າງ, ຮອຍຍິ້ມຂອງເຮົາ, ການກິນຂອງເຮົາ, ເຄື່ອງນຸ່ງຂອງເຮົາ, ພຣະເຈົ້າເອງປະຕິບັດທຸກສິ່ງຂອງເຮົາ. ພວກເຈົ້າພິພາກສາເຮົາ; ມັນເປັນໄປໄດ້ບໍວ່າພວກເຈົ້າໄດ້ເຫັນພຣະເຈົ້າກ່ອນການມາເຖິງຂອງເຮົາ? ຖ້າບໍ່ ແລ້ວເປັນຫຍັງພວກເຈົ້າຈຶ່ງປຽບທຽບທາງຄວາມຄິດລະຫວ່າງເຮົາ ແລະ ພຣະເຈົ້າຂອງເຈົ້າ? ມັນລ້ວນແລ້ວແຕ່ເປັນຜົນຈາກແນວຄິດຂອງມະນຸດ! ການກະທຳ ແລະ ການປະພຶດຂອງເຮົາບໍ່ສອດຄ່ອງກັບຈິນຕະນາການຂອງເຈົ້າ ແມ່ນບໍ? ເຮົາບໍ່ຍອມໃຫ້ໃຜກໍຕາມສະແດງຄວາມຄິດເຫັນວ່າການກະທຳ ແລະ ການປະພຶດຂອງເຮົາຖືກຕ້ອງ ຫຼື ບໍ່. ເຮົາເປັນພຣະເຈົ້າທີ່ແທ້ຈິງພຽງໜຶ່ງດຽວ ແລະ ສິ່ງນີ້ເປັນຄວາມຈິງທີ່ບໍ່ສາມາດປ່ຽນແປງ ແລະ ບໍ່ສາມາດໂຕ້ແຍ້ງໄດ້! ຢ່າຕົກເປັນເຫຍື່ອໃນອຸບາຍຂອງເຈົ້າເອງ. ພຣະທຳຂອງເຮົາໄດ້ຊີ້ເຖິງສິ່ງນີ້ໄວ້ຢ່າງຊັດເຈນທີ່ສຸດ. ບໍ່ມີເສດມະນຸດແມ່ນແຕ່ເລັກນ້ອຍໃນຕົວເຮົາ; ທັງໝົດຂອງເຮົາກໍແມ່ນພຣະເຈົ້າເອງ ທີ່ຖືກເຮັດໃຫ້ເປັນທີ່ປະຈັກຕໍ່ພວກເຈົ້າຢ່າງສົມບູນ ໂດຍບໍ່ມີຫຍັງລີ້ລັບແມ່ນແຕ່ອັນດຽວ!

# ບົດທີ 72

ຖ້າເຈົ້າຄົ້ນພົບຂໍ້ບົກຜ່ອງ ຫຼື ຄວາມອ່ອນແອໃດໜຶ່ງໃນຕົວເຈົ້າເອງ, ເຈົ້າຕ້ອງເພິ່ງພາເຮົາເພື່ອທີ່ຈະກຳຈັດມັນໃຫ້ອອກຈາກຕົວເຈົ້າໃນທັນທີ. ຢ່າຊັກຊ້າເລີຍ; ບໍ່ດັ່ງນັ້ນ ພາລະກິດຂອງພຣະວິນຍານບໍລິສຸດຈະຢູ່ຫ່າງໄກຈາກເຈົ້າຫຼາຍ ແລະ ເຈົ້າຈະຕົກຢູ່ຂ້າງຫຼັງຫຼາຍ. ພາລະກິດທີ່ເຮົາໄດ້ຝາກຝັງໄວ້ກັບເຈົ້ານັ້ນສາມາດຖືກເຮັດໃຫ້ສຳເລັດໄດ້ໂດຍພຽງແຕ່ຜ່ານທາງການຫຍັບເຂົ້າໃກ້, ການອະທິຖານ ແລະການສືບທະນາຕໍ່ໜ້າເຮົາຢູ່ເລື້ອຍໆເທົ່ານັ້ນ. ຖ້າເຈົ້າບໍ່ເຮັດສິ່ງເຫຼົ່ານີ້, ແລ້ວມັນກໍຈະບໍ່ບັນລຸຜົນຫຍັງເລີຍ ແລະ ທຸກສິ່ງຖືກປະຕິບັດໂດຍສູນເປົ່າ. ພາລະກິດຂອງເຮົາໃນປັດຈຸບັນບໍ່ຄືກັບໃນອະດີດ; ຂອບເຂດຊີວິດໃນຜູ້ຄົນທີ່ເຮົາຮັກກໍແຕກຕ່າງກັນຫຼາຍຈາກສິ່ງທີ່ມັນເຄີຍເປັນມາກ່ອນ. ພວກເຂົາທຸກຄົນມີຄວາມເຂົ້າໃຈພຣະທຳຂອງເຮົາຢ່າງຊັດເຈນ ພ້ອມທັງມີຄວາມເຂົ້າໃຈແຫຼມຄົມໃນພຣະທຳເຫຼົ່ານັ້ນ. ນີ້ແມ່ນລັກສະນະທີ່ຊັດເຈນທີ່ສຸດ ເຊິ່ງສາມາດສະທ້ອນຄວາມມະຫັດສະຈັນຂອງພາລະກິດຂອງເຮົາໄດ້ຫຼາຍທີ່ສຸດ. ບາດກ້າວຂອງພາລະກິດຂອງເຮົາໄດ້ໄວຂຶ້ນ ແລະ ພາລະກິດຂອງເຮົາແມ່ນແຕກຕ່າງຈາກອະດີດຢ່າງແນ່ນອນ. ມັນຍາກທີ່ຈະໃຫ້ຜູ້ຄົນຈິນຕະນາການ ແລະ ຍິ່ງໄປກວ່ານັ້ນ ມັນເປັນໄປບໍ່ໄດ້ທີ່ຈະໃຫ້ຜູ້ຄົນຢັ່ງເຖິງ. ບໍ່ມີຫຍັງທີ່ເປັນຄວາມເລິກລັບຕໍ່ພວກເຈົ້າອີກຕໍ່ໄປ; ກົງກັນຂ້າມທຸກສິ່ງຖືກເຮັດໃຫ້ເປັນທີ່ຮູ້ຈັກ ແລະ ຊັດແຈ້ງຂຶ້ນ. ມັນໂປ່ງໃສ, ມັນຖືກປົດປ່ອຍໃຫ້ເປັນອິດສະຫຼະ ແລະ ຍິ່ງໄປກວ່ານັ້ນ ມັນເສລີແທ້ໆ. ຄົນທີ່ເຮົາຮັກຈະບໍ່ຖືກຈຳກັດໂດຍຄົນໃດໜຶ່ງ, ເຫດການ, ສິ່ງຂອງ ຫຼື ອາວະກາດ ຫຼື ພູມມີສາດໃດໜຶ່ງ; ພວກເຂົາຈະຢູ່ເໜືອການຄວບຄຸມທີ່ກຳນົດຂຶ້ນໂດຍສະພາບແວດລ້ອມທັງໝົດ ແລະ ປາກົດອອກມາຈາກເນື້ອໜັງ. ນີ້ແມ່ນຄວາມສຳເລັດຂອງພາລະກິດທີ່ຍິ່ງໃຫຍ່ຂອງເຮົາ. ຫຼັງຈາກນັ້ນ ຈະບໍ່ມີຫຍັງທີ່ຫຼົງເຫຼືອໃຫ້ເຮັດອີກ; ມັນຈະຖືກເຮັດໃຫ້ສຳເລັດຢ່າງສົມບູນ.

ຄວາມສຳເລັດຂອງພາລະກິດທີ່ຍິ່ງໃຫຍ່ແມ່ນຖືກກ່າວເພື່ອອ້າງອີງເຖິງລູກຊາຍກົກທຸກຄົນ ແລະເຖິງທຸກຄົນທີ່ເຮົາຮັກ. ຕໍ່ຈາກນີ້ໄປ ເຈົ້າຈະບໍ່ຖືກຄວບຄຸມໂດຍຄົນ, ເຫດການ ຫຼື ສິ່ງຂອງໃດໜຶ່ງ. ເຈົ້າຈະເດີນທາງທົ່ວບັນດາປະຊາຊາດຕ່າງໆໃນຈັກກະວານ, ຂ້າມຜ່ານຈັກກະວານທັງປວງ ແລະ ຖິ້ມຮອຍຕີນຂອງພວກເຈົ້າຢູ່ທຸກຫົນແຫ່ງ. ຢ່າຖືວ່ານີ້ເປັນສິ່ງໄກຫຼາຍ; ມັນແມ່ນສິ່ງທີ່ຈະເກີດຂຶ້ນຈິງໃນໄວໆນີ້ຢູ່ຕໍ່ຕາຂອງພວກເຈົ້າ. ສິ່ງທີ່ເຮົາເຮັດຈະຖືກຝາກຝັງໄວ້ກັບພວກເຈົ້າ ແລະ ສະຖານທີ່ໆເຮົາຢຽບກໍຈະມີຮອຍຕີນຂອງພວກເຈົ້ານຳ. ຍິ່ງໄປກວ່ານັ້ນ ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງການທີ່ພວກເຮົານັ້ນກໍຄື ພວກເຈົ້າ ແລະ ເຮົາປົກຄອງຮ່ວມກັນດັ່ງກະສັດ. ເຈົ້າໄດ້ໄຕ່ຕອງແລ້ວບໍວ່າເປັນຫຍັງການເປີດເຜີຍທີ່ເຮົາມອບໃຫ້ຈຶ່ງຊັດເຈນຍິ່ງຂຶ້ນ ແລະ ຊັດແຈ້ງຫຼາຍຍິ່ງຂຶ້ນເລື້ອຍໆ ໂດຍບໍ່ລີ້ລັບແມ່ນແຕ່ໜ້ອຍດຽວ? ເປັນຫຍັງເຮົາຈຶ່ງເປັນພະຍານສູງສຸດ ແລະ ບອກຄວາມເລິກລັບທຸກຢ່າງ ແລະ ພຣະທຳທຸກຂໍ້ໃຫ້ກັບພວກເຈົ້າ? ເຫດຜົນກໍບໍ່ໄດ້ຫຼາຍກວ່າພາລະກິດທີ່ກ່າວມາຂ້າງເທິງ. ເຖິງຢ່າງໃດກໍຕາມຄວາມຄືບໜ້າຂອງພາລະກິດຂອງພວກເຈົ້າໃນປັດຈຸບັນແມ່ນຊ້າຫຼາຍເກີນໄປ. ເຈົ້າບໍ່ສາມາດນຳທັນ

ກ້າວຍ່າງຂອງເຮົາ, ເຈົ້າບໍ່ສາມາດຮ່ວມມືກັບເຮົາດ້ວຍດີ ແລະ ສຳລັບປັດຈຸບັນນີ້ ເຈົ້າຍັງບໍ່ສາມາດບັນລຸຄວາມປະສົງຂອງເຮົາໄດ້. ເຮົາຕ້ອງຝຶກຝົນພວກເຈົ້າໃຫ້ໜັກຍິ່ງຂຶ້ນ ແລະ ເລັ່ງການທີ່ເຮົາຈະເຮັດໃຫ້ພວກເຈົ້າຄົບຖ້ວນ, ເພື່ອວ່າພວກເຈົ້າຈະສາມາດເຮັດໃຫ້ເຮົາພໍໃຈໄດ້ໄວເທົ່າທີ່ຈະໄວໄດ້.

ສິ່ງຊັດເຈນທີ່ສຸດໃນຕອນນີ້ກໍຄືກຸ່ມຂອງລູກຊາຍກົກໄດ້ກໍ່ຕົວຂຶ້ນຢ່າງສົມບູນ. ທຸກຄົນໄດ້ຮັບການເຫັນດີຈາກເຮົາ ແລະ ຖືກເຮົາໄດ້ກຳນົດລ່ວງໜ້າ ແລະ ໄດ້ເລືອກໄວ້ຕັ້ງແຕ່ການສ້າງໂລກ. ແຕ່ລະຄົນຖືກສິ່ງເສີມໂດຍມືຂອງເຮົາເອງ. ບໍ່ມີພື້ນທີ່ວ່າງໃຫ້ມະນຸດໄດ້ຄຳນຶງໃນສິ່ງນີ້ເລີຍ. ມັນຢູ່ນອກເໜືອການຄວບຄຸມຂອງເຈົ້າ. ຢ່າພູມໃຈ; ມັນລ້ວນແລ້ວແຕ່ເປັນຄວາມກະລຸນາ ແລະ ຄວາມຮັກຂອງເຮົາ. ຈາກທັດສະນະຂອງເຮົາ, ທຸກສິ່ງຖືກເຮັດໃຫ້ສຳເລັດແລ້ວ. ມັນພຽງແຕ່ວ່າຕາຂອງພວກເຈົ້າມົວຫຼາຍເກີນໄປ ແລະ ແມ່ນແຕ່ໃນປັດຈຸບັນນີ້ ພວກເຈົ້າກໍບໍ່ສາມາດໄດ້ຮັບມຸມມອງທີ່ຊັດເຈນກ່ຽວກັບຄວາມມະຫັດສະຈັນແຫ່ງການກະທຳຂອງເຮົາ. ບໍ່ມີຜູ້ໃດໃນພວກເຈົ້າທີ່ມີຄວາມເຂົ້າໃຈທີ່ຊັດເຈນ ຫຼື ແທ້ຈິງຢ່າງສົມບູນກ່ຽວກັບອຳນາດອັນໄພສານຂອງເຮົາ, ສະຕິປັນຍາຂອງເຮົາ, ທຸກການປະພຶດຂອງເຮົາ ຫຼື ພຣະທຳທຸກຂໍ້ ແລະ ທຸກການກະທຳຂອງເຮົາ. ຍ້ອນເຫດຜົນນີ້ ເຮົາຈຶ່ງເວົ້າຢ່າງຊັດເຈນ. ສຳລັບລູກຊາຍຂອງເຮົາ, ຜູ້ເປັນທີ່ຮັກຂອງເຮົາ, ເຮົາເຕັມໃຈທີ່ຈະຈ່າຍລາຄາທັງໝົດ, ເຕັມໃຈທີ່ເຮັດວຽກໜັກ ແລະ ເຕັມໃຈທີ່ຈະສະຫຼະຕົນເອງ. ເຈົ້າຮູ້ຈັກເຮົາຜ່ານທາງພຣະທຳຂອງເຮົາບໍ? ເຈົ້າຕ້ອງການໃຫ້ເຮົາເວົ້າມັນຢ່າງຊັດເຈນຫຼາຍຍິ່ງຂຶ້ນບໍ? ຢ່າເສເພອີກຕໍ່ໄປ; ໃຫ້ຄຳນຶງເຖິງຫົວໃຈຂອງເຮົາ! ບັດນີ້ ຄວາມເລິກລັບທີ່ຍິ່ງໃຫຍ່ດັ່ງກ່າວໄດ້ຖືກເປີດເຜີຍໃຫ້ກັບພວກເຈົ້າແລ້ວ, ພວກເຈົ້າມີຫຍັງໃຫ້ເວົ້າອີກ? ເຈົ້າຍັງມີຄຳຕໍ່ວ່າອີກບໍ? ຖ້າເຈົ້າບໍ່ຈ່າຍລາຄາ ແລະ ເຮັດວຽກໜັກ, ແລ້ວເຈົ້າຈະເໝາະສົມກັບຄວາມພະຍາຍາມອັນພາກພຽນທັງໝົດທີ່ເຮົາໄດ້ຮັບເອົາບໍ?

ຜູ້ຄົນໃນປັດຈຸບັນບໍ່ສາມາດຄວບຄຸມຕົນເອງໄດ້. ຄວາມຮັກທີ່ມີຕໍ່ເຮົາບໍ່ສາມາດເກີດຂຶ້ນໄດ້ໃນຄົນທີ່ເຮົາບໍ່ຊື່ນຊົມ ເຖິງແມ່ນວ່າພວກເຂົາຕ້ອງການໄດ້ຮັບຄວາມຮັກນັ້ນ. ເຖິງຢ່າງໃດກໍຕາມ ຜູ້ຄົນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ໄດ້ເລືອກໄວ້ນັ້ນຈະບໍ່ສາມາດຫຼີກໜີໄດ້ ເຖິງແມ່ນພວກເຂົາອາດຕ້ອງການເຮັດ; ບໍ່ວ່າພວກເຂົາຈະໄປໃສກໍຕາມ ພວກເຂົາຈະບໍ່ສາມາດຫຼົບໜີຈາກມືຂອງເຮົາໄດ້. ສິ່ງດັ່ງກ່າວແມ່ນຄວາມສະຫງ່າຜ່າເຜີຍຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ມັນຄືການພິພາກສາຂອງເຮົາ. ທຸກຄົນຕ້ອງເລີ່ມວຽກງານຂອງພວກເຂົາຕາມແຜນການຂອງເຮົາ ແລະ ຕາມຄວາມປະສົງຂອງເຮົາ. ແນ່ນອນ ທຸກສິ່ງຕັ້ງແຕ່ມື້ນີ້ເປັນຕົ້ນໄປແມ່ນກັບຄືນສູ່ມືຂອງເຮົາ ແລະ ຢູ່ນອກເໜືອການຄວບຄຸມຂອງພວກເຂົາ. ທຸກສິ່ງຖືກຄວບຄຸມ ແລະ ຈັດແຈງໂດຍເຮົາ. ຖ້າຜູ້ຄົນມີສ່ວນຮ່ວມໃນວິທີທີ່ເລັກນ້ອຍ, ເຮົາກໍຈະບໍ່ປ່ອຍພວກເຂົາໄປຢ່າງງ່າຍດາຍ. ເລີ່ມຕັ້ງແຕ່ມື້ນີ້, ເຮົາຈະໃຫ້ທຸກຄົນເລີ່ມຮູ້ຈັກເຮົາ ຜູ້ເຊິ່ງເປັນພຣະເຈົ້າທີ່ແທ້ຈິງພຽງອົງດຽວ ທີ່ສ້າງທຸກສິ່ງ, ເປັນຜູ້ທີ່ມາຢູ່ທ່າມກາງມະນຸດ ແລະ ຖືກປະຕິເສດ ແລະ ຖືກພວກເຂົາກ່າວຮ້າຍປ້າຍສີ ແລະ ເປັນຜູ້ທີ່ຄວບຄຸມ ແລະ ຈັດແຈງທຸກສິ່ງທັງໝົດ; ເປັນກະສັດຜູ້ທີ່ຄວບຄຸມອານາຈັກ, ເປັນພຣະເຈົ້າເອງທີ່ຄຸ້ມຄອງຈັກກະວານ; ແລະ ຍິ່ງໄປກວ່ານັ້ນກໍຍັງເປັນພຣະເຈົ້າທີ່ຄວບຄຸມຊີວິດ ແລະ ຄວາມຕາຍຂອງມະນຸດ ແລະ ເປັນຜູ້ທີ່ຖືກະແຈແຫ່ງດິນແດນມໍລະນາ.

ເຮົາຈະໃຫ້ທຸກຄົນ (ຜູ້ໃຫຍ່, ເດັກນ້ອຍ ບໍ່ວ່າພວກເຂົາມີວິນຍານ ຫຼື ບໍ່ ແລະ ບໍ່ວ່າພວກເຂົາຈະເປັນຄົນໂງ່ ຫຼື ເສຍອົງຄະ, ອື່ນໆ) ຮູ້ຈັກເຮົາ. ເຮົາບໍ່ຍົກເວັ້ນໃຜກໍຕາມຈາກພາລະກິດນີ້; ມັນເປັນພາລະກິດທີ່ເຄັ່ງຄັດທີ່ສຸດ, ເປັນພາລະກິດທີ່ເຮົາໄດ້ຈັດກຽມເປັນຢ່າງດີ ແລະ ເປັນພາລະກິດທີ່ກຳລັງຖືກປະຕິບັດເຊິ່ງເລີ່ມຕົ້ນຈາກຕອນນີ້. ສິ່ງທີ່ເຮົາເວົ້າກໍຈະຖືກເຮັດໃຫ້ສຳເລັດ. ໃຫ້ເປີດຕາຝ່າຍວິນຍານຂອງເຈົ້າ, ໃຫ້ປະຖິ້ມແນວຄິດຂອງເຈົ້າເອງ ແລະ ຮັບຮູ້ວ່າເຮົາເປັນພຣະເຈົ້າທີ່ແທ້ຈິງພຽງອົງດຽວ ຜູ້ເຊິ່ງປົກຄອງຈັກກະວານ! ເຮົາບໍ່ໄດ້ລີ້ລັບຈາກຜູ້ໃດ ແລະ ປະຕິບັດບົດບັນຍັດການບໍລິຫານຂອງເຮົາຕໍ່ທຸກຄົນ.

ໃຫ້ປະຖິ້ມທຸກສິ່ງຂອງເຈົ້າເອງ. ສິ່ງທີ່ເຈົ້າໄດ້ຮັບຈາກເຮົາບໍ່ແມ່ນສິ່ງທີ່ມີຄຸນຄ່າທີ່ຍິ່ງໃຫຍ່ກວ່າ ແລະ ມີຄວາມສຳຄັນຫຼາຍກວ່າບໍ? ບໍ່ແມ່ນມີຄວາມແຕກຕ່າງກັນຫຼາຍລະຫວ່າງສິ່ງເຫຼົ່ານັ້ນ ແລະ ເສດຂີ້ເຫຍື້ອຂອງເຈົ້າບໍ? ຢ່າຊັກຊ້າ ແລະ ໂຍນຖິ້ມທຸກສິ່ງທີ່ບໍ່ມີປະໂຫຍດ! ບັດນີ້ ມັນຖືກກຳນົດແລ້ວວ່າເຈົ້າຈະໄດ້ຮັບພອນ ຫຼື ຈະພົບກັບຄວາມໂຊກຮ້າຍ. ນີ້ແມ່ນຊ່ວງເວລາທີ່ສຳຄັນ; ມັນຍິ່ງເປັນຊ່ວງເວລາທີ່ສຳຄັນທີ່ສຸດ. ເຈົ້າສາມາດເຫັນສິ່ງນີ້ຢ່າງແທ້ຈິງບໍ?

# ບົດທີ 73

ພຣະທຳຂອງເຮົາຖືກເຮັດໃຫ້ສຳເລັດທັນທີທີ່ເຮົາກ່າວອອກມາ; ພຣະທຳເຫຼົ່ານັ້ນບໍ່ເຄີຍປ່ຽນແປງຈັກເທື່ອ ແລະ ຖືກຕ້ອງທັງໝົດ. ຈົ່ງຈື່ສິ່ງນີ້ໄວ້! ເຈົ້າຕ້ອງພິຈາລະນາພຣະທຳ ແລະ ວະລີທຸກຂໍ້ທີ່ອອກມາຈາກປາກຂອງເຮົາຢ່າງລະອຽດ. ຈົ່ງລະມັດລະວັງເພີ່ມຂຶ້ນຕື່ມ ເພື່ອບໍ່ໃຫ້ເຈົ້າໄດ້ຮັບຄວາມສູນເສຍ ແລະ ໄດ້ຮັບແຕ່ການພິພາກສາຂອງເຮົາ, ຄວາມໂກດຮ້າຍຂອງເຮົາ, ການເຜົາໄໝ້ຂອງເຮົາເທົ່ານັ້ນ. ບັດນີ້ ພາລະກິດຂອງເຮົາກຳລັງເຄື່ອນໄປຢ່າງໄວຫຼາຍ, ເຖິງແມ່ນວ່າມັນບໍ່ສົມບູນ; ມັນກໍປານິດຫຼາຍ ຈົນໃນຄວາມເປັນຈິງແລ້ວ ມັນບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ ແລະ ບໍ່ສາມາດຈັບຕ້ອງໄດ້ດ້ວຍມືຂອງມະນຸດ. ມັນປານິດເປັນພິເສດ. ເຮົາບໍ່ເຄີຍກ່າວພຣະທຳທີ່ວ່າງເປົ່າຈັກເທື່ອ ແລະ ທຸກສິ່ງທີ່ເຮົາກ່າວລ້ວນແລ້ວແຕ່ເປັນຈິງ. ເຈົ້າຄວນເຊື່ອວ່າ ພຣະທຳທຸກຂໍ້ເປັນຈິງ ແລະ ຖືກຕ້ອງ. ຢ່າເລີນເລີ້; ນີ້ຄືຊ່ວງເວລາທີ່ສຳຄັນ! ບໍ່ວ່າເຈົ້າຈະໄດ້ຮັບພອນ ຫຼື ຄວາມໂຊກຮ້າຍກໍຈະຖືກກຳນົດໃນຊ່ວງເວລານີ້ ແລະ ຄວາມແຕກຕ່າງແມ່ນຄືກັບລະຫວ່າງສະຫວັນ ແລະ ແຜ່ນດິນໂລກ. ບໍ່ວ່າເຈົ້າຈະໄປສະຫວັນ ຫຼື ດິນແດນມໍລະນາ ກໍລ້ວນແລ້ວແຕ່ຢູ່ໃນການຄວບຄຸມຂອງເຮົາທັງໝົດ. ຄົນທີ່ໄປດິນແດນມໍລະນາກໍຕໍ່ສູ້ກັບການດິ້ນລົນຄັ້ງສຸດທ້າຍກ່ອນຕາຍ, ໃນຂະນະທີ່ຄົນໄປສະຫວັນກຳລັງທົນທຸກເປັນຄັ້ງສຸດທ້າຍ ແລະ ເສຍສະຫຼະເປັນຄັ້ງສຸດທ້າຍສຳລັບເຮົາ ແລະ ທຸກສິ່ງທີ່ພວກເຂົາຈະເຮັດໃນອະນາຄົດກ່ຽວຂ້ອງກັບການເຜີດເພີນ ແລະ ການສັນລະເສີນ ໂດຍບໍ່ມີສິ່ງເລັກນ້ອຍໃດໆມາລົບກວນພວກເຂົາ (ການແຕ່ງດອງ, ວຽກງານ, ຄວາມຮັ່ງມີທີ່ແສນລຳບາກ, ສະຖານະ ແລະ ອື່ນໆອີກ). ແຕ່ສຳລັບຄົນທີ່ໄປດິນແດນມໍລະນາ, ການທົນທຸກຂອງພວກເຂົາແມ່ນຕະຫຼອດການ (ສິ່ງນີ້ໝາຍເຖິງຈິດໃຈ, ວິນຍານ ແລະ ຮ່າງກາຍຂອງພວກເຂົາ), ພວກເຂົາຈະບໍ່ສາມາດໜີຈາກມືແຫ່ງການພິພາກສາຂອງເຮົາໄດ້ຈັກເທື່ອ. ສອງດ້ານນີ້ບໍ່ສາມາດເຂົ້າກັນໄດ້ຄືກັບໄຟ ແລະ ນໍ້າ. ພວກມັນບໍ່ໄດ້ປະປົນກັນແມ່ນແຕ່ໜ້ອຍດຽວ: ຄົນທີ່ໄດ້ທົນທຸກກັບຄວາມໂຊກຮ້າຍກໍຈະສືບຕໍ່ທົນທຸກກັບຄວາມໂຊກຮ້າຍ, ໃນຂະນະທີ່ຄົນທີ່ໄດ້ຮັບພອນກໍຈະມີຄວາມສຸກຈົນພວກເຂົາພໍໃຈ.

ທຸກເຫດການ ແລະ ທຸກສິ່ງແມ່ນຖືກຄວບຄຸມໂດຍເຮົາ ຍິ່ງໄປກວ່ານັ້ນ ພວກເຈົ້າ ຜູ້ເປັນລູກຊາຍຂອງເຮົາ, ຜູ້ເປັນທີ່ຮັກຂອງເຮົາແມ່ນຍິ່ງເປັນຄົນຂອງເຮົາ. ເຈົ້າເປັນແກ້ວຜະລຶກແຫ່ງແຜນການຄຸ້ມຄອງ 6.000 ປີ ຂອງເຮົາ, ເປັນຊັບສົມບັດຂອງເຮົາ. ທຸກຄົນທີ່ເຮົາຮັກເປັນທີ່ພໍໃຈໃນສາຍຕາເຮົາ, ເພາະວ່າ ພວກເຂົາສຳແດງອອກເຖິງເຮົາ; ທຸກຄົນທີ່ເຮົາຊັງ ເຮົາກໍກຽດຊັງໂດຍບໍ່ຫຼຽວເບິ່ງພວກເຂົາເລີຍ, ເພາະວ່າ ພວກເຂົາເປັນເຊື້ອສາຍຂອງຊາຕານ ແລະ ເປັນຄົນຂອງຊາຕານ. ໃນປັດຈຸບັນ, ທຸກຄົນຄວນວິເຄາະເບິ່ງຕົນເອງ: ຖ້າເຈດຕະນາຂອງເຈົ້າຖືກຕ້ອງ ແລະ ເຈົ້າຮັກເຮົາຢ່າງແທ້ຈິງ, ແລ້ວເຈົ້າກໍຈະຖືກເຮົາຮັກຢ່າງແນ່ນອນ. ເຈົ້າຕ້ອງຮັກເຮົາຢ່າງແທ້ຈິງ ແລະ ຕ້ອງບໍ່ຫຼອກລວງເຮົາ! ເຮົາເປັນພຣະເຈົ້າທີ່ສຳຫຼວດເຖິງຈຸດເລິກສຸດໃນຫົວໃຈຂອງຜູ້ຄົນ! ຖ້າເຈດຕະນາຂອງເຈົ້າຜິດ ແລະ ເຈົ້າເຢັນຊາ ແລະ ບໍ່ຊື່ສັດຕໍ່ເຮົາ, ແລ້ວເຈົ້າກໍຈະຖືກເຮົາກຽດຊັງຢ່າງແນ່ນອນ ແລະ ເຈົ້າກໍຈະບໍ່ຖືກເຮົາເລືອກ ຫຼື ຖືກເຮົາ

ແຕ່ງຕັ້ງໄວ້ລ່ວງໜ້າ. ເຈົ້າມີແຕ່ລໍຖ້າເຖິງເວລາໄປນະອີກເລີຍ! ຄົນອື່ນອາດບໍ່ສາມາດເຫັນສິ່ງເຫຼົ່ານີ້ໄດ້, ແຕ່ມີພຽງເຈົ້າ ແລະ ເຮົາ ຜູ້ເຊິ່ງເປັນພຣະເຈົ້າທີ່ເບິ່ງເລິກລົງໄປໃນຫົວໃຈຂອງຜູ້ຄົນ ທີ່ຮູ້ຈັກສິ່ງເຫຼົ່ານີ້ໄດ້. ສິ່ງເຫຼົ່ານີ້ຈະຖືກເປີດເຜີຍໃນເວລາໃດໜຶ່ງຢ່າງແນ່ນອນ. ຄົນຈິງໃຈບໍ່ຈຳເປັນຕ້ອງກັງວົນໃຈ ແລະ ຄົນບໍ່ຈິງໃຈບໍ່ຈຳເປັນຕ້ອງຢ້ານ. ມັນລ້ວນແລ້ວແຕ່ເປັນສ່ວນໜຶ່ງຂອງການຈັດແຈງຢ່າງຫຼັກແຫຼມຂອງເຮົາ.

ພາລະກິດທີ່ມີແມ່ນຮີບດ່ວນ ແລະ ລຳບາກ ແລະ ຕ້ອງການໃຫ້ພວກເຈົ້າເສຍສະຫຼະເພື່ອເຮົາຄັ້ງສຸດທ້າຍເພື່ອເຮັດໃຫ້ພາລະກິດສຸດທ້າຍນີ້ສຳເລັດ. ເງື່ອນໄຂຂອງເຮົາກໍບໍ່ໄດ້ຮຽກຮ້ອງຫຍັງຫຼາຍ: ເຮົາພຽງແຕ່ຕ້ອງການໃຫ້ພວກເຈົ້າສາມາດປະສານງານກັບເຮົາໃຫ້ດີ, ເຮັດໃຫ້ເຮົາພໍໃຈໃນທຸກສິ່ງ, ປະຕິບັດຕາມການນຳພາຂອງເຮົາທີ່ຢູ່ພາຍໃນຕົວເຈົ້າ. ຢ່າຕາບອດ; ໃຫ້ມີເປົ້າໝາຍ ແລະ ພະຍາຍາມຮຽນຮູ້ເຈດຕະນາຂອງເຮົາຈາກທຸກດ້ານ ແລະ ໃນທຸກໆສິ່ງ. ນີ້ກໍຍ້ອນວ່າ ເຮົາບໍ່ໄດ້ເປັນພຣະເຈົ້າທີ່ລຶ້ລັບສຳລັບພວກເຈົ້າອີກຕໍ່ໄປ ແລະ ເຈົ້າຕ້ອງຊັດເຈນໃນສິ່ງນີ້ເພື່ອຈະໄດ້ເຂົ້າໃຈເຈດຕະນາຂອງເຮົາ. ໃນໄລຍະເວລາສັ້ນໆນີ້, ພວກເຈົ້າຈະບໍ່ພຽງແຕ່ພົບກັບຄົນຕ່າງຊາດທີ່ສະແຫວງຫາຫົນທາງທີ່ແທ້ຈິງ, ສິ່ງທີ່ຍິ່ງສຳຄັນໄປກວ່ານັ້ນກໍຄື ພວກເຈົ້າຕ້ອງມີຄວາມສາມາດທີ່ຈະລ້ຽງດູພວກເຂົາ. ນັ້ນແມ່ນເຈດຕະນາອັນຮີບດ່ວນຂອງເຮົາ. ມັນຮັບບໍ່ໄດ້ຖ້າເຈົ້າບໍ່ສາມາດເຫັນສິ່ງນີ້ໄດ້. ເຖິງຢ່າງໃດກໍຕາມ ເຈົ້າຕ້ອງເຊື່ອໃນອຳນາດອັນໄພສານຂອງເຮົາ. ຕາບໃດທີ່ຜູ້ຄົນຖືກຕ້ອງ, ເຮົາຈະຝຶກຝົນພວກເຂົາໃຫ້ເປັນທະຫານທີ່ດີຢ່າງແນ່ນອນ. ທຸກສິ່ງຖືກຈັດແຈງໂດຍເຮົາຢ່າງເໝາະສົມແລ້ວ. ພວກເຈົ້າຕ້ອງມີຄວາມປາຖະໜາທີ່ຈະທົນທຸກເພື່ອເຮົາ. ນີ້ແມ່ນຊ່ວງເວລາທີ່ສຳຄັນ. ຢ່າພາດມັນເລີຍ! ເຮົາຈະບໍ່ຈົມປັກຢູ່ກັບສິ່ງຕ່າງໆທີ່ພວກເຈົ້າເຮັດໃນອະດີດ. ພວກເຈົ້າຕ້ອງອະທິຖານ ແລະ ອ້ອນວອນຢູ່ຕໍ່ໜ້າເຮົາເລື້ອຍໆ; ເຮົາຈະປະທານຄວາມກະລຸນາຢ່າງພຽງພໍໃຫ້ກັບເຈົ້າເພື່ອຄວາມສຸກ ແລະ ການນຳໃຊ້ຂອງເຈົ້າ. ຄວາມກະລຸນາ ແລະ ພອນແມ່ນບໍ່ຄືກັນ. ສິ່ງທີ່ພວກເຈົ້າກຳລັງໄດ້ຮັບໃນປັດຈຸບັນນີ້ແມ່ນຄວາມກະລຸນາຂອງເຮົາ ແລະ ໃນສາຍຕາຂອງເຮົາແລ້ວ ສິ່ງນີ້ບໍ່ສົມຄວນເອີຍເຖິງເລີຍ, ແຕ່ສຳລັບການອວຍພອນແມ່ນສິ່ງທີ່ພວກເຈົ້າຈະໄດ້ຮັບໂດຍບໍ່ມີສິ້ນສຸດໃນອະນາຄົດ. ສິ່ງເຫຼົ່ານັ້ນແມ່ນພອນທີ່ຜູ້ຄົນບໍ່ໄດ້ຄິດໃສ່ໃຈ ແລະ ເປັນສິ່ງທີ່ບໍ່ສາມາດຈິນຕະນາການໄດ້. ນີ້ແມ່ນເຫດຜົນທີ່ເຮົາກ່າວວ່າ ພວກເຈົ້າໄດ້ຮັບພອນ ແລະ ມັນຄືພອນທີ່ມະນຸດຍັງບໍ່ໄດ້ຮັບຕັ້ງແຕ່ການເນລະມິດສ້າງ.

ເຮົາໄດ້ເປີດເຜີຍທຸກສິ່ງຂອງເຮົາຕໍ່ພວກເຈົ້າແລ້ວ. ເຮົາພຽງແຕ່ຫວັງວ່າ ພວກເຈົ້າຈະສາມາດຄຳນຶງເຖິງຫົວໃຈຂອງເຮົາ, ອຸທິດຄວາມຄິດຂອງພວກເຈົ້າໃຫ້ແກ່ເຮົາໃນທຸກສິ່ງທີ່ພວກເຈົ້າເຮັດ ແລະ ຄຳນຶງເຖິງເຮົາໃນທຸກດ້ານ ເພື່ອວ່າສິ່ງທີ່ເຮົາເຫັນຢູ່ສະເໝີຈະເປັນໃບໜ້າແຫ່ງຮອຍຍິ້ມຂອງພວກເຈົ້າ. ຕັ້ງແຕ່ນີ້ເປັນຕົ້ນໄປ, ຄົນທີ່ໄດ້ຮັບສະຖານະຂອງລູກຊາຍກົກແມ່ນຄົນທີ່ຈະປົກຄອງດັ່ງກະສັດຄຽງຂ້າງເຮົາ. ພວກເຂົາຈະບໍ່ຖືກອ້າຍນ້ອງຄົນອື່ນຂົ່ມເຫັງ ຫຼື ພວກເຂົາຈະບໍ່ຖືກເຮົາຕີສອນ ຫຼື ຈັດການ, ເພາະຫຼັກການຂອງເຮົາໃນການເຮັດສິ່ງຕ່າງໆກໍຄື ຄົນທີ່ຢູ່ໃນກຸ່ມຂອງລູກຊາຍກົກແມ່ນຄົນທີ່ຖືກດູຖູກ ແລະ ຖືກຄົນອື່ນຂົ່ມເຫັງ ແລະ ໄດ້ທົນທຸກກັບຄວາມລຳບາກທຸກປະການໃນຊີວິດ. (ພວກເຂົາຖືກ

ຈັດການ ແລະ ຖືກເຮົາເຮັດໃຫ້ແຕກຫັກກ່ອນລ່ວງໜ້າ ແລະ ຖືກເຮັດໃຫ້ເປັນຄົນບໍລິບູນລ່ວງໜ້າ ແລ້ວ). ຄົນເຫຼົ່ານີ້ໄດ້ເພີດເພີນກັບພອນທີ່ພວກເຂົາຄວນໄດ້ຮັບກ່ອນລ່ວງໜ້າຮ່ວມກັບເຮົາ. ເຮົາຊອບທຳ ແລະ ບໍ່ເຄີຍລຳອຽງຕໍ່ຄົນໃດຄົນໜຶ່ງ.

# ບົດທີ 74

ຄົນທີ່ອ່ານພຣະທຳຂອງເຮົາ ແລະ ເຊື່ອວ່າພຣະທຳເຫຼົ່ານັ້ນຈະຖືກເຮັດໃຫ້ສຳເລັດ ກໍເປັນສຸກ, ເຮົາຈະບໍ່ປະຕິບັດຕໍ່ເຈົ້າແບບຜິດໆເລີຍ; ແຕ່ຈະເຮັດໃຫ້ສິ່ງທີ່ເຈົ້າເຊື່ອນັ້ນສຳເລັດໃນຕົວເຈົ້າ. ນີ້ແມ່ນພອນຂອງເຮົາທີ່ຈະມາເຖິງເຈົ້າ. ພຣະທຳຂອງເຮົາໂຈມຕີຄວາມລັບທີ່ລີ້ລັບຢູ່ໃນທຸກຄົນຕາມຄາດໝາຍ; ທຸກຄົນມີບາດແຜຂອງມະນຸດ ແລະ ເຮົາເປັນໝໍດີທີ່ຮັກສາພວກເຂົາ: ພຽງແຕ່ໃຫ້ມາຢູ່ຕໍ່ໜ້າເຮົາ. ເປັນຫຍັງເຮົາຈຶ່ງເວົ້າວ່າໃນອະນາຄົດ ຈະບໍ່ມີໂສກເສົ້າ ແລະ ບໍ່ມີນໍ້າຕາອີກຕໍ່ໄປ? ມັນເປັນຍ້ອນເຫດຜົນນີ້. ໃນເຮົາ, ທຸກສິ່ງຖືກເຮັດໃຫ້ສຳເລັດ, ແຕ່ໃນມະນຸດ ທຸກສິ່ງລ້ວນແລ້ວແຕ່ເສື່ອມຊາມ, ວ່າງເປົ່າ ແລະ ຫຼອກລວງສຳລັບມະນຸດ. ຕໍ່ໜ້າເຮົາ, ເຈົ້າຈະຮັບທຸກສິ່ງຢ່າງແນ່ນອນ ແລະ ເຈົ້າຈະສາມາດທັງເຫັນ ແລະ ຊື່ນຊົມພອນທຸກຢ່າງທີ່ເຈົ້າບໍ່ສາມາດຈິນຕະນາການໄດ້ຢ່າງແນ່ນອນ. ຄົນທີ່ບໍ່ມາຢູ່ຕໍ່ໜ້າເຮົາເປັນຄົນກະບົດຢ່າງແນ່ນອນ ແລະ ເປັນຄົນທີ່ຕໍ່ຕ້ານເຮົາຢ່າງແນ່ນອນ. ເຮົາຈະບໍ່ປ່ອຍພວກເຂົາໄປງ່າຍໆຢ່າງແນ່ນອນ; ເຮົາຈະຂ້ຽນຕີຄົນປະເພດນີ້ຢ່າງຮຸນແຮງ. ໃຫ້ຈື່ສິ່ງນີ້ໄວ້! ຍິ່ງຜູ້ຄົນມາຢູ່ຕໍ່ໜ້າເຮົາຫຼາຍສໍ່າໃດ, ພວກເຂົາກໍຍິ່ງຈະໄດ້ຮັບຫຼາຍຂຶ້ນ, ເຖິງແມ່ນວ່າມັນຈະເປັນພຽງຄວາມກະລຸນາ. ຈັກໜ້ອຍ, ພວກເຂົາຈະໄດ້ຮັບພອນທີ່ຍິ່ງໃຫຍ່ຫຼາຍກວ່າເກົ່າ.

ຕັ້ງແຕ່ການເນລະມິດສ້າງແຜ່ນດິນໂລກ, ເຮົາກໍເລີ່ມກຳນົດໂຊກຊະຕາ ແລະ ຄັດເລືອກຄົນກຸ່ມນີ້ກ່າວຄື ພວກເຈົ້າໃນປັດຈຸບັນ. ອາລົມ, ຄວາມສາມາດ, ຮູບຮ່າງ ແລະ ວຸດທິພາວະ, ຄອບຄົວທີ່ພວກເຈົ້າເກີດ, ອາຊີບຂອງເຈົ້າ ແລະ ການແຕ່ງດອງຂອງເຈົ້າ, ທັງໝົດຂອງເຈົ້າ, ແມ່ນແຕ່ສີຜົມຂອງເຈົ້າ ແລະຜິວຂອງເຈົ້າ ແລະ ເວລາທີ່ເຈົ້າເກີດລ້ວນແລ້ວແຕ່ຖືກຈັດແຈງໂດຍມືຂອງເຮົາ. ແມ່ນແຕ່ສິ່ງທີ່ເຈົ້າເຮັດແລະ ຄົນທີ່ເຈົ້າພົບໃນແຕ່ລະມື້ກໍຖືກຈັດກຽມໂດຍມືຂອງເຮົາ, ບໍ່ຕ້ອງເອີຍເຖິງຄວາມຈິງທີ່ວ່າ ການນຳເຈົ້າເຂົ້າມາຢູ່ຕໍ່ໜ້າເຮົາໃນປັດຈຸບັນກໍແມ່ນການຈັດແຈງຂອງເຮົາແທ້ໆ. ຢ່າໂຍນຕົນເອງເຂົ້າສູ່ຄວາມວຸ້ນວາຍເລີຍ; ເຈົ້າຄວນດຳເນີນຕໍ່ໄປແບບໃຈເຢັນ. ສິ່ງທີ່ເຮົາຍອມໃຫ້ເຈົ້າໄດ້ຮັບໃນປັດຈຸບັນແມ່ນສ່ວນແບ່ງທີ່ເຈົ້າສົມຄວນໄດ້ຮັບ ແລະ ມັນຖືກກຳນົດລ່ວງໜ້າໂດຍເຮົາຕັ້ງແຕ່ການເນລະມິດສ້າງໂລກແລ້ວ. ມະນຸດລ້ວນແລ້ວແຕ່ຮຸນແຮງຫຼາຍ, ຖ້າພວກເຂົາບໍ່ຫົວແຂງເກີນໄປ ກໍບໍ່ມີຢາງອາຍທີ່ສຸດ. ພວກເຂົາບໍ່ສາມາດເລີ່ມເຮັດສິ່ງຕ່າງໆຕາມແຜນການ ແລະ ການຈັດແຂງຂອງເຮົາໄດ້. ຢ່າເຮັດແບບນີ້ອີກຕໍ່ໄປເລີຍ. ໃນເຮົາ ທຸກຄົນຖືກປົດປ່ອຍແລ້ວ; ຢ່າຜູກມັດຕົນເອງ ຍ້ອນຈະມີການສູນເສຍກ່ຽວກັບຊີວິດຂອງເຈົ້າ. ໃຫ້ຈື່ສິ່ງນີ້ໄວ້!

ຈົ່ງເຊື່ອວ່າທຸກສິ່ງຢູ່ໃນມືຂອງເຮົາ. ສິ່ງທີ່ຖືວ່າເລິກລັບຕໍ່ພວກເຈົ້າໃນອະດີດລ້ວນແລ້ວແຕ່ຖືກເປີດເຜີຍອອກໃນປັດຈຸບັນ; ພວກມັນບໍ່ຖືກປິດບັງອີກຕໍ່ໄປ (ຍ້ອນເຮົາໄດ້ເວົ້າວ່າ ໃນອະນາຄົດ ຈະບໍ່ມີຫຍັງທີ່ຄົງລີ້ລັບອີກຕໍ່ໄປ). ຜູ້ຄົນໃຈຮ້ອນຢູ່ເລື້ອຍໆ; ພວກເຂົາກັງວົນໃຈເກີນໄປທີ່ຈະເຮັດໃຫ້ສິ່ງຕ່າງໆສຳເລັດ ແລະ ບໍ່ພິຈາລະນາເຖິງສິ່ງທີ່ຢູ່ໃນຫົວໃຈຂອງເຮົາ. ເຮົາກຳລັງຝຶກຝົນພວກເຈົ້າເພື່ອພວກເຈົ້າຈະແບ່ງເບົາພາລະຂອງເຮົາ ແລະ ຄຸ້ມຄອງຄົວເຮືອນຂອງເຮົາ. ເຮົາຕ້ອງການໃຫ້ພວກເຈົ້າເຕີບໃຫຍ່

ຢ່າງໄວ ເພື່ອວ່າພວກເຈົ້າຈະສາມາດນຳພາອ້າຍນ້ອງຂອງພວກເຈົ້າ ຜູ້ທີ່ໜຸ່ມກວ່າພວກເຈົ້າ ແລະ ເພື່ອວ່າພວກເຮົາ ຜູ້ເຊິ່ງເປັນພຣະບິດາ ແລະ ລູກຊາຍ ອາດຈະຮ່ວມກັນໃໝ່ໃນໄວໆນີ້, ບໍ່ອອກຫ່າງຈາກກັນອີກຈັກເທື່ອເລີຍ. ສິ່ງນີ້ຈະບັນລຸຕາມເຈດຕະນາໃນຫົວໃຈຂອງເຮົາ. ຄວາມເລິກລັບໄດ້ຖືກເປີດເຜີຍໃຫ້ກັບທຸກຄົນແລ້ວ ແລະ ບໍ່ມີຫຍັງທີ່ຄຶງລີ້ລັບອີກເລີຍ: ເຮົາ ຜູ້ເຊິ່ງເປັນພຣະເຈົ້າທີ່ສົມບູນ ຜູ້ທີ່ມີທັງຄວາມເປັນມະນຸດທຳມະດາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນ ຖືກເປີດເຜີຍຕໍ່ຕາຂອງພວກເຈົ້າທັນທີໃນປັດຈຸບັນ. ຄວາມເປັນຢູ່ທັງໝົດຂອງເຮົາ (ເຄື່ອງແຕ່ງຕົວ, ລັກສະນະພາຍນອກ ແລະ ຮູບຮ່າງທາງຮ່າງກາຍ) ແມ່ນການສະແດງອອກທີ່ສົມບູນຂອງພຣະເຈົ້າເອງ; ມັນຄື ການປາກົດຮູບຮ່າງຂອງພຣະເຈົ້າທີ່ມະນຸດໄດ້ຈິນຕະນາການຕັ້ງແຕ່ການເນລະມິດສ້າງໂລກ ແຕ່ບໍ່ມີໃຜເຫັນໄດ້. ເຫດຜົນທີ່ການກະທຳຂອງເຮົາເປັນໄປຕາມພຣະທຳຂອງເຮົາກໍຄື ຄວາມເປັນມະນຸດທຳມະດາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນໄດ້ເສີມສ້າງກັນ ແລະ ກັນ; ຍິ່ງໄປກວ່ານັ້ນ ສິ່ງນີ້ເຮັດໃຫ້ທຸກຄົນເຫັນວ່າ ຕົວຕົນທຳມະດາທີ່ມີລິດອຳນາດຢ່າງຫຼວງຫຼາຍແບບນີ້. ພວກເຈົ້າທີ່ເຊື່ອໃນເຮົາຢ່າງແທ້ຈິງກໍຍ້ອນເຮົາໄດ້ມອບຫົວໃຈທີ່ແທ້ຈິງໃຫ້ກັບເຈົ້າເພື່ອເຮັດໃຫ້ເຈົ້າສາມາດຮັກເຮົາໄດ້. ເມື່ອເຮົາຈັດການກັບເຈົ້າ, ເຮົາກໍໄດ້ສ່ອງແສງໃຫ້ແກ່ເຈົ້າ ແລະ ສ່ອງສະຫວ່າງໃຫ້ແກ່ເຈົ້າ ແລະ ຜ່ານສິ່ງນີ້ ເຮົາເຮັດໃຫ້ເຈົ້າຮູ້ຈັກເຮົາ. ຜົນຕາມມາກໍຄື ບໍ່ວ່າເຮົາຈະຈັດການກັບເຈົ້າແນວໃດກໍຕາມ, ເຈົ້າຈະບໍ່ແລ່ນໜີ; ກົງກັນຂ້າມ, ເຈົ້າຈະຍິ່ງແນ່ໃຈໃນຕົວເຮົາຂຶ້ນເລື້ອຍໆ. ເມື່ອເຈົ້າອ່ອນແອ, ສິ່ງນີ້ກໍຄືການຈັດແຈງຂອງເຮົາເຊັ່ນກັນ ແລະ ມັນເຮັດໃຫ້ເຈົ້າເຫັນວ່າ ຖ້າເຈົ້າຈາກເຮົາໄປ, ເຈົ້າຈະຕາຍ ແລະ ແຫ່ວແຫ້ງ. ຈາກສິ່ງນັ້ນ ເຈົ້າອາດຮຽນຮູ້ວ່າເຮົາຄືຊີວິດຂອງເຈົ້າ. ໃນຂະນະທີ່ເຈົ້າເລີ່ມເຂັ້ມແຂງຂຶ້ນຫຼັງຈາກທີ່ອ່ອນແອ, ມັນຈະເຮັດໃຫ້ເຈົ້າເຫັນວ່າຄວາມອ່ອນແອ ຫຼື ຄວາມເຂັ້ມແຂງບໍ່ໄດ້ຂຶ້ນກັບເຈົ້າ, ແຕ່ຂຶ້ນກັບເຮົາທັງໝົດ.

ຄວາມເລິກລັບທັງໝົດໄດ້ຖືກເປີດເຜີຍຢ່າງສົມບູນ. ສຳລັບກິດຈະກຳໃນອະນາຄົດຂອງພວກເຈົ້າ, ເຮົາຈະໃຫ້ຄຳສັ່ງຂອງເຮົາເທື່ອລະຄັ້ງ. ເຮົາຈະບໍ່ຄຸມເຄືອ; ເຮົາຈະຊັດເຈນຢ່າງທີ່ສຸດ ແລະ ແມ່ນແຕ່ເວົ້າກັບພວກເຈົ້າໂດຍກົງ; ນີ້ກໍເພື່ອວ່າພວກເຈົ້າຈະບໍ່ຈຳເປັນຕ້ອງໄຕ່ຕອງສິ່ງຕ່າງໆດ້ວຍຕົວຂອງພວກເຈົ້າເອງ, ເພື່ອບໍ່ໃຫ້ພວກເຈົ້າທຳລາຍການຄຸ້ມຄອງຂອງເຮົາ. ມັນເປັນຍ້ອນເຫດຜົນນີ້ ເຮົາຈຶ່ງຢໍ້າແລ້ວຢໍ້າອີກວ່າ ຈະບໍ່ມີສິ່ງທີ່ລີ້ລັບອີກ ຕັ້ງແຕ່ນີ້ເປັນຕົ້ນໄປ.

# ບົດທີ 75

ທຸກສິ່ງທຸກຢ່າງຈະຖືກປະຕິບັດທັນທີທີ່ພຣະທຳຂອງເຮົາຖືກກ່າວອອກໄປ ໂດຍພາຍໃນຂອບເຂດຂອງຫຼັກການ. ຕັ້ງແຕ່ນີ້ເປັນຕົ້ນໄປ, ຄວາມລຶກລັບທຸກຢ່າງທີ່ຖືກເຊື່ອງຊ້ອນໄວ້ຈະບໍ່ຖືກປົດບັງ ຫຼື ປົກປິດອີກຕໍ່ໄປ ແລະ ຈະຖືກເປີດເຜີຍໃຫ້ພວກເຈົ້າເຫັນຢ່າງຊັດເຈນ ນັ້ນກໍຄືບຸດຊາຍອັນເປັນທີ່ຮັກຂອງເຮົາ. ເຮົາຈະເຮັດໃຫ້ເຈົ້າເຫັນເຖິງໝາຍສຳຄັນ ແລະ ການອັດສະຈັນທີ່ຍິ່ງໃຫຍ່ໃນຕົວເຮົາ ແລະ ຄວາມລຶກລັບທີ່ຍິ່ງໃຫຍ່ກວ່າເກົ່າ. ສິ່ງເຫຼົ່ານີ້ຈະເຮັດໃຫ້ພວກເຈົ້າຕົກຕະລຶງຢ່າງແນ່ນອນ ແລະ ເຮັດໃຫ້ພວກເຈົ້າມີຄວາມເຂົ້າໃຈກ່ຽວກັບເຮົາຫຼາຍຂຶ້ນ ນັ້ນກໍຄື ພຣະເຈົ້າອົງຊົງລິດທານຸພາບສູງສຸດ ແລະ ໃນນັ້ນພວກເຈົ້າກໍຈະໄດ້ຮັບຮູ້ເຖິງສະຕິປັນຍາຂອງເຮົາອີກດ້ວຍ. ໃນປັດຈຸບັນ ພວກເຈົ້າຖືກນຳມາຢູ່ຕໍ່ໜ້າພຣະເຈົ້າອົງແທ້ຈິງອົງດຽວ ທີ່ມະນຸດບໍ່ເຄີຍເຫັນຈັກເທື່ອຕັ້ງແຕ່ການຊົງສ້າງ ແລະ ບໍ່ມີຫຍັງທີ່ພິເສດກ່ຽວກັບເຮົາເລີຍ. ເຮົາກິນ, ດຳລົງຊີວິດ, ກ່າວ ແລະ ຫົວໄປກັບພວກເຈົ້າ ແລະ ເຮົາດຳລົງຊີວິດພາຍໃນຕົວພວກເຈົ້າຢູ່ຕະຫຼອດເວລາ ໃນຂະນະດຽວກັນຍັງເຄື່ອນໄຫວທ່າມກາງພວກເຈົ້າອີກດ້ວຍ. ສຳລັບຄົນທີ່ບໍ່ເຊື່ອ ຫຼື ຜູ້ທີ່ມີແນວຄິດຂອງຕົນເອງທີ່ຮ້າຍແຮງ, ສິ່ງນີ້ຄືອຸປະສັກ. ນີ້ແມ່ນສະຕິປັນຍາຂອງເຮົາ. ເຮົາຍັງຈະເປີດເຜີຍໃຫ້ບາງຄົນເຫັນໃນສິ່ງທີ່ຄວາມເປັນມະນຸດປົກກະຕິຂອງເຮົາບໍ່ຮູ້ຈັກ, ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ເຮົາບໍ່ແມ່ນພຣະເຈົ້າ. ໃນທາງກົງກັນຂ້າມ, ຂໍ້ນີ້ແມ່ນພຽງພໍທີ່ຈະພິສູດໃຫ້ເຫັນແລ້ວວ່າ ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ. ສຳລັບຄົນທີ່ເຊື່ອ, ຂໍ້ນີ້ແມ່ນມີຜົນກະທົບຢ່າງແນ່ນອນ ແລະ ຍ້ອນປະເດັນນີ້ ພວກເຂົາຈຶ່ງມີຄວາມໝັ້ນໃຈໃນຕົວເຮົາຮ້ອຍເປີເຊັນ. ຢ່າໃຈຮ້ອນຫຼາຍເກີນໄປ; ເຮົາຈະເປີດເຜີຍສິ່ງຕ່າງໆໃຫ້ກັບເຈົ້າເທື່ອລະຢ່າງ.

ສຳລັບພວກເຈົ້າແລ້ວ, ເຮົາເປີດເຜີຍ ແລະ ບໍ່ໄດ້ລີ້ລັບເລີຍ. ເຖິງຢ່າງໃດກໍຕາມ ສຳລັບຄົນທີ່ບໍ່ເຊື່ອ ເຊິ່ງເປັນຄົນທີ່ໄວ້ໃຈບໍ່ໄດ້, ຜູ້ເຊິ່ງຖືກຊາຕານເຮັດໃຫ້ເສື່ອມຊາມ ເຮົາຍັງຄົງລີ້ລັບຕໍ່ໄປ. ເຖິງແນວໃດກໍຕາມ ເມື່ອເຮົາເວົ້າເຖິງການເປີດເຜີຍຕົວເຮົາເອງໃຫ້ກັບທຸກຄົນ, ເຮົາໝາຍເຖິງຄວາມຊອບທຳ, ການພິພາກສາ ແລະ ຄວາມສະຫງ່າງາມຂອງເຮົາ ເພື່ອວ່າ ພວກເຂົາຈະໄດ້ຮູ້ວ່າ ເຮົາຮັບຜິດຊອບທຸກສິ່ງຢ່າງທີ່ຢູ່ໃນຈັກກະວານ ແລະ ສິ່ງທັງປວງ. ຈົ່ງປະພຶດຕົວຢ່າງກ້າຫານ! ຈົ່ງເງີຍໜ້າຂຶ້ນ! ຢ່າຢ້ານເລີຍ ເພາະເຮົາ ຜູ້ເປັນບິດາຂອງພວກເຈົ້າ ຢູ່ທີ່ນີ້ເພື່ອສະໜັບສະໜູນພວກເຈົ້າ ແລະ ພວກເຈົ້າຈະບໍ່ທົນທຸກ. ຕາບໃດທີ່ພວກເຈົ້າອະທິຖານ ແລະ ອ້ອນວອນຕໍ່ໜ້າເຮົາຢູ່ເລື້ອຍໆ, ເຮົາຈະປະທານຄວາມເຊື່ອທັງໝົດໃຫ້ກັບພວກເຈົ້າ. ຄົນທີ່ມີລິດອຳນາດອາດເບິ່ງຈາກພາຍນອກ ຄືກັບວ່າ ເປັນຄົນຮ້າຍກາດ ແຕ່ຢ່າຢ້ານເລີຍ, ພວກເຈົ້າເປັນແບບນີ້ກໍຍ້ອນວ່າ ພວກເຈົ້າມີຄວາມເຊື່ອເລັກນ້ອຍ. ຕາບໃດທີ່ຄວາມເຊື່ອຂອງພວກເຈົ້າເຕີບໂຕ, ບໍ່ມີສິ່ງໃດທີ່ຫຍຸ້ງຍາກເກີນໄປ. ຈົ່ງຊື່ນບານ ແລະ ໂດດເຕັ້ນຈົນພວກເຈົ້າພໍໃຈ! ທຸກສິ່ງຢູ່ພາຍໃຕ້ຕີນຂອງພວກເຈົ້າ ແມ່ນຢູ່ໃນກຳມືຂອງເຮົາແລ້ວ. ພຣະທຳຂໍ້ນີ້ຂໍ້ດຽວຂອງເຮົາບໍ່ໄດ້ຕັດສິນຄວາມສຳເລັດ ຫຼື ຄວາມພິນາດບໍ?

ທຸກຄົນທີ່ເຮົາກຳລັງໃຊ້ໃນປັດຈຸບັນໄດ້ຮັບການເຫັນດີຈາກເຮົາເປັນເວລາດົນນານມາແລ້ວ.

ນັ້ນກໍຄື ຄົນທີ່ຢູ່ໃນກຸ່ມລູກຊາຍກົກແມ່ນຖືກກຳນົດໄວ້ແລ້ວ ແລະ ຖືກກຳນົດໄວ້ຕັ້ງແຕ່ຕອນເຮົາສ້າງແຜ່ນດິນໂລກ. ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້ ແລະ ທຸກສິ່ງທຸກຢ່າງຕ້ອງເປັນໄປຕາມຄຳສັ່ງຂອງເຮົາ. ບໍ່ມີມະນຸດຄົນໃດທີ່ສາມາດເຮັດໄດ້; ສິ່ງເຫຼົ່ານີ້ແມ່ນການຈັດແຈງຂອງເຮົາທັງໝົດ. ມີເຮົາ ທຸກສິ່ງທຸກຢ່າງຈະໝັ້ນຄົງ ແລະ ປອດໄພ; ມີເຮົາ ທຸກສິ່ງຢ່າງຈະໄດ້ຮັບການປະຕິບັດດ້ວຍຄວາມເໝາະສົມ ແລະ ສົມຄວນ ໂດຍບໍ່ຈຳເປັນຕ້ອງໃຊ້ຄວາມພະຍາຍາມແມ່ນແຕ່ໜ້ອຍດຽວ. ເຮົາກ່າວ ແລະ ມັນກໍຖືກສ້າງຂຶ້ນ; ເຮົາກ່າວ ແລະ ມັນກໍສຳເລັດລົງ. ດ້ວຍວ່າ ສະຖານະການສາກົນກຳລັງຢູ່ໃນຄວາມວຸ້ນວາຍ, ເປັນຫຍັງພວກເຈົ້າຈຶ່ງບໍ່ຟ້າວເລີ່ມຕົ້ນການຝຶກຝົນຂອງພວກເຈົ້າ? ພວກເຈົ້າຈະລໍຖ້າຈົນເຖິງເມື່ອໃດ? ພວກເຈົ້າຈະລໍຖ້າຈົນຮອດມື້ທີ່ຊາວຕ່າງປະເທດຫຼັ່ງໄຫຼເຂົ້າມາສູ່ປະເທດຈີນຢ່າງຫຼວງຫຼາຍເພື່ອພົບກັບພວກເຈົ້າບໍ? ໃນເມື່ອກ່ອນ ພວກເຈົ້າອາດຈະຊ້າໄປໜ້ອຍໜຶ່ງ ແຕ່ພວກເຈົ້າບໍ່ສາມາດສືບຕໍ່ເຮັດຕາມໃຈຕົນເອງໄດ້ອີກຕໍ່ໄປ! ບຸດຊາຍທັງຫຼາຍຂອງເຮົາເອີຍ! ຈົ່ງຄິດເຖິງເຈດຕະນາຢ່າງພາກພຽນຂອງເຮົາດ້ວຍ! ຄົນທີ່ເຂົ້າໃກ້ເຮົາຢູ່ຕະຫຼອດເວລາຈະໄດ້ຮັບທຸກສິ່ງທຸກຢ່າງ. ແລ້ວພວກເຈົ້າເດ ບໍ່ໄວ້ໃຈເຮົາບໍ?

ຈັງຫວະກ້າວເດີນແຫ່ງພາລະກິດຂອງເຮົາໄວຄືກັບສາຍຟ້າແມບເຫຼື້ອມ, ແຕ່ບໍ່ດັງຄືສຽງຟ້າຮ້ອງທີ່ດັງກຶກກ້ອງຢ່າງແນ່ນອນ. ພວກເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ບໍ? ພວກເຈົ້າຕ້ອງສາມາດປະສານກັບເຮົາໃຫ້ໄດ້ດີຂຶ້ນກວ່ານີ້ ແລະ ຈົ່ງຄຳນຶງເຖິງເຈດຕະນາຂອງເຮົາ. ພວກເຈົ້າຢາກໄດ້ຮັບພອນ, ແຕ່ຍັງຢ້ານການທົນທຸກ; ພວກເຈົ້າບໍ່ແມ່ນສອງຈິດສອງໃຈບໍ? ໃຫ້ເຮົາບອກເຈົ້າເທີດ! ຖ້າຄົນໜຶ່ງປາຖະໜາທີ່ຈະຮັບເອົາການອວຍພອນໃນປັດຈຸບັນ ແຕ່ບໍ່ຍອມເສຍສະຫຼະທຸກສິ່ງຢ່າງຈົນເຖິງເວລາສຸດທ້າຍນັ້ນ ແລ້ວສິ່ງທີ່ພວກເຈົ້າຈະໄດ້ຮັບກໍຄືການລົງໂທດ ແລະ ການພິພາກສາຂອງເຮົາ. ເຖິງຢ່າງໃດກໍຕາມ, ຄົນທີ່ເສຍສະຫຼະທຸກຢ່າງກໍຈະພົບກັບສັນຕິສຸກໃນທຸກຢ່າງ ແລະ ມີທຸກສິ່ງຢ່າງທີ່ອຸດົມສົມບູນ ແລະ ທຸກສິ່ງຢ່າງທີ່ພວກເຂົາໄດ້ຮັບກໍຈະເປັນການອວຍພອນຂອງເຮົາ. ສິ່ງທີ່ຈຳເປັນຢ່າງຮີບດ່ວນໃນປັດຈຸບັນນີ້ ກໍຄືຄວາມເຊື່ອຂອງພວກເຈົ້າ ແລະ ເພື່ອໃຫ້ພວກເຈົ້າຊົດໃຊ້ກຳຂອງພວກເຈົ້າທີ່ກະທຳໄວ້. ຢ່າໄດ້ຕີຄວາມໝາຍເຈດຕະນາຂອງເຮົາຜິດ. ທຸກສິ່ງທຸກຢ່າງຈະເກີດຂຶ້ນເປັນຈິງ ແລະ ພວກເຈົ້າກໍຈະເຫັນມັນດ້ວຍຕາຂອງພວກເຈົ້າເອງ ແລະ ຜະເຊີນກັບມັນດ້ວຍຕົວເຈົ້າເອງ. ມີເຮົາ, ກໍຈະບໍ່ມີຄຳເວົ້າທີ່ຈອມປອມ ຫຼື ການເວົ້າຕົວະ; ທຸກສິ່ງທີ່ເຮົາກ່າວແມ່ນເປັນຄວາມຈິງທັງໝົດ ແລະ ບໍ່ໄດ້ຂາດສະຕິປັນຍາ. ຢ່າເຊື່ອເຄິ່ງໜຶ່ງ ແລະ ສົງໄສເຄິ່ງໜຶ່ງ. ເຮົານີ້ແຫຼະແມ່ນຜູ້ທີ່ສຳເລັດທຸກສິ່ງທຸກຢ່າງທ່າມກາງພວກເຈົ້າ ແລະ ແມ່ນເຮົານີ້ແຫຼະ ທີ່ເປັນຜູ້ພິພາກສາ ແລະ ຈັດແບ່ງຄົນທີ່ກະທຳຄວາມດີອອກຈາກຄວາມຊົ່ວ. ເຮົາຮັກພວກເຈົ້າ ແລະ ເຮົາເຮັດໃຫ້ພວກເຈົ້າສົມບູນແບບ. ເຖິງຢ່າງໃດກໍຕາມ ສຳລັບພວກເຂົາແລ້ວ ເຮົາເປັນສິ່ງທີ່ກົງກັນຂ້າມຢ່າງສິ້ນເຊີງ ນັ້ນກໍຄື ຄວາມກຽດຊັງ ແລະ ຄວາມພິນາດ ໂດຍບໍ່ມີສາເຫດ ແລະ ຜົນພິສູດຫຍັງເລີຍ. ຄວາມອຸດົມສົມບູນຂອງເຮົາຝັງຕິດຢູ່ໃນທຸກສິ່ງທຸກຢ່າງທີ່ເຮົາກ່າວ ແລະ ກະທຳ. ພວກເຈົ້າໄດ້ກວດສອບເບິ່ງສິ່ງເຫຼົ່ານັ້ນຢ່າງລະອຽດແລ້ວບໍ? ພຣະທຳບາງຂໍ້ ເຮົາກໍໄດ້ເວົ້າໄປຫຼາຍເທື່ອແລ້ວ ສະນັ້ນ ເປັນຫຍັງພວກເຈົ້າຈຶ່ງຍັງບໍ່

ເຂົ້າໃຈໃນສິ່ງທີ່ເຮົາກ່າວນັ້ນວ່າ ເຮົາໝາຍເຖິງຫຍັງ? ຫຼັງຈາກທີ່ເຈົ້າອ່ານພຣະທຳຂອງເຮົາ ທຸກສິ່ງທຸກຢ່າງຈະເປັນໄປຕາມສິ່ງທີ່ມັນຄວນເປັນບໍ? ແລ້ວທຸກສິ່ງທຸກຢ່າງຈະຖືກເຮັດໃຫ້ສຳເລັດບໍ? ເຈົ້າບໍ່ມີເຈດຕະນາທີ່ຈະຄິດເຖິງຫົວໃຈຂອງເຮົາເລີຍ. ເປັນຫຍັງເຮົາຈຶ່ງເວົ້າວ່າ ເຮົາມີອຳນາດຢ່າງສົມບູນ, ມີສະຕິປັນຍາຮອບດ້ານ, ເປັນພຣະເຈົ້າອົງແທ້ຈິງອົງດຽວ ຜູ້ເຊິ່ງເບິ່ງລົງເລິກໄປໃນຫົວໃຈຂອງຜູ້ຄົນ? ເຈົ້າຍັງບໍ່ເຂົ້າໃຈຄວາມໝາຍຂອງພຣະທຳເຫຼົ່ານີ້ບໍ? ເຈົ້າໄດ້ທ່ອງຂຶ້ນໃຈພຣະທຳແຕ່ລະຂໍ້ທີ່ເຮົາເໜັ້ນໜັກໃນນີ້ຢູ່ບໍ່? ແລ້ວສິ່ງເຫຼົ່ານັ້ນໄດ້ກາຍມາເປັນຫຼັກການໃນການປະພຶດຕົນຂອງເຈົ້າແລ້ວບໍ?

ເຮົາຢືນຢູ່ເໜືອທຸກສິ່ງທຸກຢ່າງ, ສັງເກດເຫັນຈັກກະວານທັງປວງ. ເຮົາຈະສຳແດງລິດອຳນາດທີ່ຍິ່ງໃຫຍ່ຂອງເຮົາ ແລະ ສະຕິປັນຍາທັງໝົດຂອງເຮົາໃຫ້ກັບທຸກຊົນຊາດ ແລະ ປະຊາຊົນທຸກຄົນ. ຢ່າໄດ້ເຮັດໃນສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອພຽງແຕ່ສະແຫວງຫາຄວາມສຸກໃນຕອນນີ້. ເມື່ອທຸກຊົນຊາດໃນແຜ່ນດິນໂລກຮ່ວມເຂົ້າກັນເປັນອັນໜຶ່ງອັນດຽວ, ແລ້ວມີຫຍັງແດ່ທີ່ຈະເປັນຂອງພວກເຈົ້າ? ເຖິງແນວໃດກໍຕາມ ເຮົາຈະບໍ່ປ່ອຍໃຫ້ພວກເຈົ້າຂາດເຂີນໃນຕອນນີ້ ຫຼື ເຮົາຈະບໍ່ຍອມໃຫ້ພວກເຈົ້າທົນທຸກ. ຈົ່ງເຊື່ອວ່າ ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ! ທຸກສິ່ງທຸກຢ່າງຈະຕ້ອງຖືກເຮັດໃຫ້ສຳເລັດ ແລະ ດີຂຶ້ນຢູ່ສະເໝີ! ບຸດຊາຍກົກທັງຫຼາຍຂອງເຮົາເອີຍ! ການອວຍພອນທຸກຢ່າງຈະມາເຖິງພວກເຈົ້າແລ້ວ! ພວກເຈົ້າຈະໄດ້ຮັບພອນເຫຼົ່ານັ້ນໂດຍບໍ່ມີວັນສິ້ນສຸດ, ຖືກສະໜອງໃຫ້ໂດຍບໍ່ຮູ້ຈັກໝົດ, ມີຄວາມຮັ່ງມີ ແລະ ອຸດົມສົມບູນ ທີ່ເຕັມປ່ຽມດ້ວຍຄວາມປະສົບຜົນສຳເລັດ!

# ບົດທີ 76

ພຣະວັດຈະນະຂອງເຮົາລ້ວນແລ້ວແຕ່ເປັນການສະແດງອອກເຖິງຄວາມປະສົງຂອງເຮົາ. ຜູ້ໃດສາມາດຄຳນຶງເຖິງພາລະຂອງເຮົາ? ຜູ້ໃດສາມາດເຂົ້າໃຈຄວາມຕັ້ງໃຈຂອງເຮົາ? ພວກເຈົ້າໄດ້ພິຈາລະນາຄຳຖາມແຕ່ລະຂໍ້ທີ່ເຮົາໄດ້ຕັ້ງໄວ້ກັບພວກເຈົ້າແລ້ວບໍ? ຊ່າງປະໝາດແທ້ເດ! ເຈົ້າກ້າລົບກວນແຜນການຂອງເຮົາໄດ້ແນວໃດ? ພວກເຈົ້າຈັ່ງແມ່ນຄວບຄຸມບໍ່ໄດ້ແທ້ເດ! ຖ້າພາລະກິດດັ່ງກ່າວຂອງວິນຍານຊົ່ວຮ້າຍຍັງສືບຕໍ່, ເຮົາຈະໂຍນພວກມັນໃຫ້ຕາຍຢູ່ຂຸມທີ່ເລິກຫຼາຍທັນທີ! ເຮົາໄດ້ເຫັນການກະທຳຕ່າງໆຂອງວິນຍານຊົ່ວຮ້າຍຢ່າງຊັດເຈນຕັ້ງແຕ່ດົນນານມາແລ້ວ. ແລ້ວເຮົາກໍຍັງເບິ່ງຄົນທີ່ຖືກວິນຍານຊົ່ວຮ້າຍໃຊ້ນັ້ນອອກ (ບັນດາຜູ້ທີ່ມີເຈດຕະນາຜິດ, ບັນດາຜູ້ທີ່ປາຖະໜາຫາເນື້ອໜັງ ຫຼື ຄວາມຮັ່ງມີ, ບັນດາຜູ້ທີ່ສັນລະເສີນຕົນເອງ, ບັນດາຜູ້ຄົນທີ່ເຮັດໃຫ້ຄຣິສຕະຈັກແຕກແຍກກັນ, ອື່ນໆ). ຢ່າຄິດວ່າທຸກສິ່ງຈົບລົງຫຼັງຈາກທີ່ວິນຍານຊົ່ວຮ້າຍຖືກໂຍນຖິ້ມ. ເຮົາຊີຂໍບອກເຈົ້າແນວນີ້! ຕັ້ງແຕ່ນີ້ເປັນຕົ້ນໄປ, ເຮົາຈະກຳຈັດຄົນເຫຼົ່ານີ້ເທື່ອລະຄົນ ໂດຍທີ່ບໍ່ໃຊ້ພວກເຂົາອີກຕໍ່ໄປຈັກເທື່ອ! ນັ້ນໝາຍຄວາມວ່າຄົນໃດກໍຕາມທີ່ຖືກວິນຍານຊົ່ວຮ້າຍເຮັດໃຫ້ເສື່ອມຊາມຈະບໍ່ຖືກເຮົາໃຊ້ ແລະ ຈະຖືກເຕະອອກໄປ! ຢ່າຄິດວ່າເຮົາບໍ່ມີຄວາມຮູ້ສຶກ! ຈົ່ງຮູ້ສິ່ງນີ້ໄວ້! ເຮົາເປັນພຣະເຈົ້າທີ່ບໍລິສຸດ ແລະ ເຮົາຈະບໍ່ອາໄສຢູ່ໃນພຣະວິຫານທີ່ສົກກະປົກ! ເຮົາພຽງແຕ່ໃຊ້ຄົນທີ່ຊື່ສັດ ແລະ ມີສະຕິປັນຍາ ທີ່ຈົ່ງຮັກພັກດີຕໍ່ເຮົາແທ້ໆ ແລະ ສາມາດຄຳນຶງເຖິງພາລະຂອງເຮົາ. ນີ້ກໍເພາະວ່າຄົນປະເພດດັ່ງກ່າວແມ່ນຖືກເຮົາກຳນົດໄວ້ລ່ວງໜ້າແລ້ວ ແລະ ແນ່ນອນຢູ່ແລ້ວວ່າ ບໍ່ມີວິນຍານຊົ່ວຮ້າຍປະຕິບັດພາລະກິດໃນພວກເຂົາເລີຍ. ໃຫ້ເຮົາເຮັດອີກສິ່ງໜຶ່ງໃຫ້ຊັດເຈນເຊິ່ງກໍຄື: ຕັ້ງແຕ່ນີ້ເປັນຕົ້ນໄປ ທຸກຄົນທີ່ບໍ່ມີພາລະກິດຂອງພຣະວິນຍານບໍລິສຸດກໍມີພາລະກິດຂອງວິນຍານຊົ່ວຮ້າຍ. ໃຫ້ເຮົາເວົ້າຢໍ້າອີກຄັ້ງ: ເຮົາບໍ່ຕ້ອງການແມ່ນແຕ່ຄົນດຽວທີ່ມີພາລະກິດຂອງວິນຍານຊົ່ວຮ້າຍ. ພວກເຂົາທຸກຄົນຈະຖືກໂຍນລົງສູ່ດິນແດນມໍລະນາພ້ອມກັບເນື້ອໜັງຂອງພວກເຂົາ!

ຂໍ້ຮຽກຮ້ອງຂອງເຮົາຈາກພວກເຈົ້າໃນອະດີດກໍບໍ່ໄດ້ເຄັ່ງຄັດປານໃດ ແລະ ພວກເຈົ້າກໍເສເພເມື່ອເວົ້າເຖິງເນື້ອໜັງ. ຕັ້ງແຕ່ມື້ນີ້ເປັນຕົ້ນໄປ, ເຮົາຈະບໍ່ຍອມໃຫ້ພວກເຈົ້າສືບຕໍ່ເຮັດແບບນີ້. ຖ້າຄຳເວົ້າ ແລະ ການກະທຳຂອງພວກເຈົ້າບໍ່ສະແດງເຖິງເຮົາໃນທຸກວິທີ ຫຼື ຖ້າພວກມັນແຕກຕ່າງຈາກລັກສະນະຂອງເຮົາແມ່ນແຕ່ໜ້ອຍດຽວ ເຮົາກໍຈະບໍ່ປ່ອຍພວກເຈົ້າໄປຢ່າງງ່າຍດາຍຢ່າງແນ່ນອນ. ບໍ່ດັ່ງນັ້ນ, ພວກເຈົ້າຈະຫົວຂວັນ ແລະ ເຮັດຫຼິ້ນຢູ່ສະເໝີ, ຫົວຈົນນໍ້າຕາອອກ ໂດຍບໍ່ຢັບຢັ້ງເລີຍ. ເມື່ອເຈົ້າເຮັດຫຍັງຜິດ, ເຈົ້າບໍ່ຮູ້ສຶກບໍວ່າເຮົາໄດ້ປະຖິ້ມເຈົ້າ? ເມື່ອເຈົ້າຮູ້, ເປັນຫຍັງເຈົ້າຈຶ່ງຍັງເສເພ? ເຈົ້າຍັງລໍຖ້າການຈັບຕ້ອງຂອງມືແຫ່ງການພິພາກສາຂອງເຮົາບໍ? ຕັ້ງແຕ່ມື້ນີ້ໄປ, ເຮົາຈະລົງໂທດທັນທີໃຜກໍຕາມທີ່ບໍ່ປະຕິບັດຕາມຄວາມຕັ້ງໃຈຂອງເຮົາແມ່ນແຕ່ຊ່ວງເວລາດຽວກໍຕາມ. ຖ້າເຈົ້ານັ່ງຈຸ້ມກັນເພື່ອເວົ້າຂວັນນິນທາ ເຮົາກໍຈະປະຖິ້ມເຈົ້າ. ຢ່າເວົ້າຖ້າເຈົ້າບໍ່ໄດ້ເສີມສ້າງຝ່າຍວິນຍານ. ເຮົາເວົ້າສິ່ງນີ້ບໍ່ແມ່ນເພື່ອຢັບຢັ້ງພວກເຈົ້າ, ແຕ່ເຮົາໝາຍຄວາມວ່າ ຍ້ອນພາລະກິດຂອງເຮົາໄດ້ປະຕິບັດຈົນເຖິງບາດກ້າວໃນ

ປັດຈຸບັນ, ເຮົາກໍຈະສືບຕໍ່ຕາມແຜນການຂອງເຮົາ. ຖ້າພວກເຈົ້ານັ່ງຈຸ້ມກັນເພື່ອສົນທະນາກັນກ່ຽວກັບສິ່ງຕ່າງໆຝ່າຍວິນຍານທີ່ຢູ່ໃນຊີວິດ ເຮົາກໍຈະຢູ່ກັບພວກເຈົ້າ. ເຮົາຈະບໍ່ປະຕິບັດຕໍ່ພວກເຈົ້າຄົນໃດຄົນໜຶ່ງຢ່າງບໍ່ເປັນທຳ. ຖ້າເຈົ້າອ້າປາກຂອງເຈົ້າ, ເຮົາຈະປະທານຄຳເວົ້າທີ່ເໝາະສົມໃຫ້ກັບເຈົ້າ. ເຈົ້າຕ້ອງເຂົ້າໃຈເຖິງຫົວໃຈຂອງເຮົາຈາກພຣະທຳຂອງເຮົາ. ເຮົາບໍ່ໄດ້ບອກພວກເຈົ້າໃຫ້ທຳທ່າປາກກືກ ຫຼື ເຮົາບໍ່ໄດ້ບອກພວກເຈົ້າໃຫ້ເວົ້າໃນສິ່ງທີ່ໄຮ້ສາລະ.

ເປັນຫຍັງເຮົາຈຶ່ງສືບຕໍ່ເວົ້າວ່າບໍ່ມີເວລາເຫຼືອຫຼາຍແລ້ວ ແລະ ມື້ຂອງເຮົາຈະບໍ່ຖືກເຮັດໃຫ້ຊັກຊ້າ? ພວກເຈົ້າຄິດກ່ຽວກັບສິ່ງນີ້ຢ່າງຮອບຄອບບໍ? ພວກເຈົ້າເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາຢ່າງແທ້ຈິງບໍ? ນັ້ນກໍຄື ເຮົາໄດ້ປະຕິບັດພາລະກິດຕັ້ງແຕ່ທີ່ເຮົາເລີ່ມເວົ້າແລ້ວ. ພວກເຈົ້າແຕ່ລະຄົນຄືເປົ້າໝາຍຂອງພາລະກິດຂອງເຮົາ. ບໍ່ແມ່ນສະເພາະຄົນໃດຄົນໜຶ່ງ; ແລະ ຍິ່ງໄປກວ່ານັ້ນ, ບໍ່ແມ່ນຄົນອື່ນອີກ. ພວກເຈົ້າພຽງແຕ່ກັງວົນໃຈກ່ຽວກັບການທີ່ຈະບໍ່ໄດ້ຮັບພອນ, ແຕ່ພວກເຈົ້າບໍ່ຄິດເຖິງຊີວິດຂອງພວກເຈົ້າ. ພວກເຈົ້າຊ່າງໂງ່ຈ້າແທ້ເດ! ພວກເຈົ້າຊ່າງເປັນຕາເວດທະນາແທ້ເດ! ພວກເຈົ້າບໍ່ຄຳນຶງເຖິງພາລະຂອງເຮົາເລີຍ!

ຄວາມພະຍາຍາມອັນພາກພຽນທັງໝົດຂອງເຮົາ ແລະ ລາຄາທີ່ເຮົາໄດ້ຈ່າຍກໍແມ່ນເພື່ອພວກເຈົ້າ. ຖ້າພວກເຈົ້າບໍ່ຄຳນຶງເຖິງພາລະຂອງເຮົາ ແລ້ວພວກເຈົ້າກໍບໍ່ໄດ້ເປັນໄປຕາມຄວາມຄາດຫວັງທີ່ເຮົາມີຕໍ່ພວກເຈົ້າ. ປະເທດຊາດທັງປວງກຳລັງລໍຖ້າໃຫ້ພວກເຈົ້າປົກຄອງ ແລະ ທຸກຄົນກຳລັງລໍຖ້າໃຫ້ພວກເຈົ້າປົກຄອງພວກເຂົາ. ເຮົາໄດ້ສົ່ງມອບທຸກສິ່ງໃຫ້ຢູ່ໃນມືຂອງພວກເຈົ້າແລ້ວ. ບັດນີ້, ຄົນທີ່ມີອຳນາດທັງໝົດກໍເລີ່ມຖອນຕົວ ແລະ ລົ້ມລົງ ແລະ ພວກເຂົາພຽງແຕ່ລໍຖ້າໃຫ້ການພິພາກສາຂອງເຮົາເກີດຂຶ້ນກັບພວກເຂົາ. ຈົ່ງເບິ່ງຢ່າງແຈ່ມແຈ້ງ! ບັດນີ້ ແຜ່ນດິນໂລກກຳລັງພັງທະລາຍລົງ ໃນຂະນະທີ່ອານາຈັກຂອງເຮົາຖືກກໍ່ສ້າງຂຶ້ນຢ່າງສຳເລັດ. ລູກຊາຍຂອງເຮົາໄດ້ປາກົດຕົວ ແລະ ລູກຊາຍກົກຂອງເຮົາກໍປົກຄອງກັບເຮົາດັ່ງກະສັດ ໂດຍ ປົກຄອງບັນດາປະເທດຊາດ ແລະ ຜູ້ຄົນ. ຢ່າຄິດວ່ານີ້ແມ່ນສິ່ງທີ່ເລື່ອນລອຍ; ມັນຄືຄວາມຈິງແທ້ໆ. ບໍ່ແມ່ນບໍ? ທັນທີທີ່ພວກເຈົ້າອະທິຖານ ແລະ ອ້ອນວອນກັບເຮົາ, ເຮົາຈະເລີ່ມປະຕິບັດທັນທີ ແລະ ລົງໂທດຄົນທີ່ຂົ່ມເຫັງພວກເຈົ້າ, ຈັດການກັບຄົນທີ່ລົບກວນພວກເຈົ້າ, ທຳລາຍຄົນທີ່ພວກເຈົ້າກຽດຊັງ ແລະ ຄຸ້ມຄອງຜູ້ຄົນ, ເຫດການ ແລະ ສິ່ງເຫຼົ່ານັ້ນທີ່ຮັບໃຊ້ພວກເຈົ້າ. ເຮົາໄດ້ເວົ້າຫຼາຍຄັ້ງແລ້ວວ່າ ເຮົາຈະບໍ່ນຳຄວາມລອດພົ້ນມາໃຫ້ໃຜກໍຕາມທີ່ເຮັດບໍລິການສຳລັບພຣະຄຣິດ (ນັ້ນກໍຄື ໃຜກໍຕາມທີ່ສະໜອງບໍລິການໃຫ້ກັບພຣະບຸດຂອງເຮົາ). ການເຮັດບໍລິການສຳລັບພຣະບຸດຂອງເຮົາບໍ່ໄດ້ໝາຍຄວາມວ່າ ພວກເຂົາເປັນຄົນດີ; ມັນເປັນຜົນຈາກລິດອຳນາດທີ່ຍິ່ງໃຫຍ່ ແລະ ການກະທຳທີ່ມະຫັດສະຈັນຂອງເຮົາທັງສິ້ນ. ຢ່າໃຫ້ຄວາມສຳຄັນກັບມະນຸດຫຼາຍເກີນໄປ. ຄົນປະເພດດັ່ງກ່າວບໍ່ມີພາລະກິດຂອງພຣະວິນຍານບໍລິສຸດຢ່າງແນ່ນອນ ແລະ ບໍ່ເຂົ້າໃຈສິ່ງຕ່າງໆທີ່ຢູ່ໃນຝ່າຍວິນຍານເລີຍ. ພວກເຂົາຈະບໍ່ມີປະໂຫຍດຫຍັງຫຼັງຈາກທີ່ເຮົາໄດ້ສຳເລັດກັບພວກເຂົາ. ໃຫ້ຈື່ສິ່ງນີ້ໄວ້! ນີ້ຄືການຢືນຢັນຂອງເຮົາຕໍ່ພວກເຈົ້າ. ຢ່າເຂົ້າໃຈຢ່າງຄຶກຄື້ນ, ເຂົ້າໃຈບໍ?

ມີໜ້ອຍຄົນລົງເລື້ອຍໆ, ແຕ່ສະມາຊິກກໍຍິ່ງບໍລິສຸດຫຼາຍຂຶ້ນເລື້ອຍໆ. ນີ້ແມ່ນພາລະກິດຂອງເຮົາ,

ແຜນການຄຸ້ມຄອງຂອງເຮົາ ແລະ ຍິ່ງໄປກວ່ານັ້ນມັນກໍຄືສະຕິປັນຍາຂອງເຮົາ ແລະ ອໍານາດອັນໄພສານຂອງເຮົາ. ມັນຄືການປະສານລະຫວ່າງຄວາມເປັນມະນຸດທໍາມະດາຂອງເຮົາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາ. ພວກເຈົ້າເຫັນສິ່ງນີ້ຢ່າງຊັດເຈນບໍ? ພວກເຈົ້າເຂົ້າໃຈປະເດັນນີ້ແທ້ໆບໍ? ເຮົາຈະເຮັດໃຫ້ທຸກສິ່ງທີ່ເຮົາໄດ້ເວົ້າຈາກຄວາມເປັນມະນຸດທໍາມະດາຂອງເຮົານັ້ນສໍາເລັດເທື່ອລະຢ່າງ ຜ່ານທາງຄວາມເປັນພຣະເຈົ້າຂອງເຮົາ. ນີ້ຄືເຫດຜົນທີ່ວ່າເປັນຫຍັງເຮົາຈະສືບຕໍ່ເວົ້າວ່າ ສິ່ງທີ່ເຮົາເວົ້າຈະເກີດຂຶ້ນໂດຍບໍ່ມີຂໍ້ສົງໄສໃດໆ; ກົງກັນຂ້າມ ທັງໝົດຈະຊັດເຈນ ແລະ ແຈ່ມແຈ້ງຫຼາຍ. ທຸກສິ່ງທີ່ເຮົາເວົ້າຈະຖືກເຮັດໃຫ້ສໍາເລັດ ແລະ ຈະບໍ່ຖືກປະຕິບັດຢ່າງເລີນເລີ້ແນ່ນອນ. ເຮົາບໍ່ໄດ້ກ່າວພຣະທໍາທີ່ວ່າງເປົ່າ ແລະ ເຮົາບໍ່ເຮັດຜິດ. ໃຜກໍຕາມທີ່ກ້າວັດແທກເຮົາກໍຈະຖືກພິພາກສາ ແລະ ຈະບໍ່ສາມາດຫຼົບໜີຈາກກໍາມືຂອງເຮົາຢ່າງແນ່ນອນ. ທັນທີທີ່ພຣະທໍາຂອງເຮົາຖືກກ່າວອອກ, ຜູ້ໃດກ້າຕໍ່ຕ້ານ? ຜູ້ໃດກ້າໂນ້ມນ້າວເຮົາ ຫຼື ປິດບັງສິ່ງໃດສິ່ງໜຶ່ງຈາກເຮົາ? ເຮົາໄດ້ເວົ້າກ່ອນໜ້ານີ້ແລ້ວວ່າ ເຮົາເປັນພຣະເຈົ້າທີ່ມີສະຕິປັນຍາ. ເຮົາໃຊ້ຄວາມເປັນມະນຸດທໍາມະດາຂອງເຮົາເພື່ອເປີດໂປງທຸກຄົນ ແລະ ພຶດຕິກໍາຊົ່ວຮ້າຍ, ເປີດໂປງຄົນທີ່ມີເຈດຕະນາຜິດໆ, ຄົນທີ່ເຮັດແບບໜຶ່ງເມື່ອຢູ່ຕໍ່ໜ້າຄົນອື່ນ ແລະ ເຮັດອີກແບບເມື່ອຢູ່ລັບຫຼັງພວກເຂົາ, ຄົນທີ່ຕໍ່ຕ້ານເຮົາ, ຄົນທີ່ບໍ່ຊື່ສັດຕໍ່ເຮົາ, ຄົນທີ່ປາຖະໜາຫາເງິນ, ຄົນທີ່ບໍ່ຄໍານຶງເຖິງພາລະຂອງເຮົາ, ຄົນທີ່ພົວພັນກັບການຫຼອກລວງ ແລະ ການຄິດໂກງອ້າຍເອື້ອຍນ້ອງຂອງພວກເຂົາ, ຄົນທີ່ເວົ້າຢ່າງໂອຫານເພື່ອເຮັດໃຫ້ຜູ້ຄົນດີໃຈ ແລະ ຄົນທີ່ບໍ່ສາມາດປະສານງານກັບອ້າຍເອື້ອຍນ້ອງຂອງພວກເຂົາຢ່າງເປັນນໍ້າໜຶ່ງໃຈດຽວກັນທັງໃນຫົວໃຈ ແລະ ຄວາມຄິດ. ຍ້ອນຄວາມເປັນມະນຸດທໍາມະດາຂອງເຮົາ, ຫຼາຍຄົນຕໍ່ຕ້ານເຮົາຢ່າງລັບໆ ແລະ ພົວພັນໃນການຫຼອກລວງ ແລະ ການຄິດໂກງໂດຍຄິດວ່າຄວາມເປັນມະນຸດທໍາມະດາຂອງເຮົາບໍ່ຮູ້. ແລ້ວຫຼາຍຄົນໃສ່ໃຈຕໍ່ຄວາມເປັນມະນຸດທໍາມະດາຂອງເຮົາເປັນພິເສດ, ມອບສິ່ງດີໆໃຫ້ກັບເຮົາເພື່ອກິນ ແລະ ດື່ມ, ຮັບໃຊ້ເຮົາຄືກັບຄົນຮັບໃຊ້ ແລະ ເວົ້າສິ່ງທີ່ຢູ່ໃນຫົວໃຈຂອງພວກເຂົາຕໍ່ເຮົາ, ໃນຂະນະດຽວກັນກໍເຮັດແຕກຕ່າງກັນໂດຍສິ້ນເຊີງເມື່ອຢູ່ລັບຫຼັງເຮົາ. ມະນຸດທີ່ຕາບອດເອີຍ! ເຈົ້າຄືມາຮູ້ຈັກເຮົາໜ້ອຍແທ້ ພຣະເຈົ້າຜູ້ເຊິ່ງເບິ່ງລົງເລິກເຂົ້າໄປໃນຫົວໃຈຂອງມະນຸດ. ແມ່ນແຕ່ຕອນນີ້ ເຈົ້າກໍ່ຍັງບໍ່ຮູ້ຈັກເຮົາ; ເຈົ້າຍັງຄິດວ່າເຮົາບໍ່ຮູ້ເຖິງສິ່ງທີ່ເຈົ້າກໍາລັງເຮັດຢູ່. ໃຫ້ຄິດເບິ່ງຄືນວ່າ: ມີເທົ່າໃດຄົນແລ້ວທີ່ທໍາລາຍຕົນເອງຍ້ອນຄວາມເປັນມະນຸດທໍາມະດາຂອງເຮົາ? ຈົ່ງຕື່ນຂຶ້ນ! ຢ່າຫຼອກລວງເຮົາອີກຕໍ່ໄປເລີຍ. ເຈົ້າຕ້ອງວາງການປະພຶດ ແລະ ພຶດຕິກໍາທຸກຢ່າງຂອງເຈົ້າ, ຄໍາເວົ້າ ແລະ ການກະທໍາທຸກຢ່າງຂອງເຈົ້າໃຫ້ຢູ່ຕໍ່ໜ້າເຮົາ ແລະ ຍອມຮັບເອົາການກວດສອບສິ່ງເຫຼົ່ານັ້ນຈາກເຮົາ.

# ບົດທີ 77

ການບໍ່ແນ່ໃຈໃນພຣະທຳຂອງເຮົາກໍເທົ່າກັບການມີທ່າທີປະຕິເສດຕໍ່ການກະທຳຂອງເຮົາ. ນັ້ນກໍຄື ພຣະທຳຂອງເຮົາໄດ້ຫຼັ່ງໄຫຼອອກຈາກພາຍໃນພຣະບຸດຂອງເຮົາ ແຕ່ພວກເຈົ້າບໍ່ໃຫ້ຄວາມສຳຄັນກັບພຣະທຳເຫຼົ່ານັ້ນ. ພວກເຈົ້າບໍ່ຈິງຈັງຫຼາຍ! ພຣະທຳຫຼາຍຂໍ້ໄດ້ຫຼັ່ງໄຫຼອອກຈາກພາຍໃນຂອງພຣະບຸດຂອງເຮົາ ແຕ່ພວກເຈົ້າກໍຍັງສົງໄສ ແລະ ບໍ່ໝັ້ນໃຈ. ພວກເຈົ້າຊ່າງຕາບອດແທ້ເດ! ພວກເຈົ້າບໍ່ເຂົ້າໃຈເຖິງເປົ້າໝາຍທີ່ຢູ່ເບື້ອງຫຼັງຂອງແຕ່ລະຢ່າງທີ່ເຮົາໄດ້ກະທຳ. ພຣະທຳທີ່ເຮົາສຳແດງຜ່ານທາງພຣະບຸດຂອງເຮົາບໍ່ແມ່ນພຣະທຳຂອງເຮົາເອງບໍ? ມີບາງສິ່ງທີ່ເຮົາບໍ່ປະສົງທີ່ຈະກ່າວໂດຍກົງ ສະນັ້ນເຮົາຈຶ່ງກ່າວຜ່ານທາງພຣະບຸດຂອງເຮົາ. ແຕ່ເຖິງຢ່າງນັ້ນ ເປັນຫຍັງພວກເຈົ້າຈຶ່ງໄຮ້ເຫດຜົນແທ້ ທີ່ຢືນຢັນວ່າເຮົາຄວນກ່າວພຣະທຳໂດຍກົງ? ພວກເຈົ້າບໍ່ເຂົ້າໃຈເຮົາເລີຍ ແລະ ພວກເຈົ້າສົງໄສກ່ຽວກັບການປະຕິບັດ ແລະ ການກະທຳຂອງເຮົາຢູ່ສະເໝີ! ເຮົາບໍ່ໄດ້ກ່າວໄວ້ກ່ອນໜ້ານີ້ບໍວ່າ ທຸກການເຄື່ອນໄຫວຂອງເຮົາ ແລະ ທຸກການປະຕິບັດ ແລະ ການກະທຳຂອງເຮົາຖືກຕ້ອງ? ຜູ້ຄົນຕ້ອງເຊົາກວດເບິ່ງສິ່ງເຫຼົ່ານັ້ນ. ຈົ່ງຖອນມືທີ່ສົກກະປົກຂອງເຈົ້າອອກໄປ! ເຮົາຂໍບອກບາງສິ່ງກັບເຈົ້າວ່າ ທຸກຄົນທີ່ເຮົາໃຊ້ແມ່ນຖືກເຮົາແຕ່ງຕັ້ງໄວ້ລ່ວງໜ້າກ່ອນທີ່ເຮົາຈະສ້າງໂລກ ແລະ ພວກເຂົາກໍໄດ້ຮັບການເຫັນດີຈາກເຮົາໃນປັດຈຸບັນ. ພວກເຈົ້າມັກພະຍາຍາມກັບສິ່ງດັ່ງກ່າວສະເໝີ, ມັກກວດເບິ່ງຕົວຕົນທີ່ເຮົາເປັນ ແລະ ສຶກສາການປະຕິບັດຂອງເຮົາ. ພວກເຈົ້າທຸກຄົນມີຄວາມຄິດແບບສໍ້ສົນ. ຖ້າສິ່ງນີ້ເກີດຂຶ້ນອີກຄັ້ງ ພວກເຈົ້າກໍຈະຖືກມືເຮົາຟາດລົງໃສ່ຢ່າງແນ່ນອນ. ສິ່ງທີ່ເຮົາກຳລັງເວົ້າກໍຄື: ຢ່າສົງໄສໃນຕົວເຮົາ ແລະ ຢ່າວິເຄາະ ຫຼື ໄຕ່ຕອງຫຼາຍກ່ຽວກັບສິ່ງທີ່ເຮົາໄດ້ກະທຳ. ຍິ່ງໄປກວ່ານັ້ນ ເຈົ້າບໍ່ຄວນເຂົ້າໄປຫຍຸ້ງກັບສິ່ງດັ່ງກ່າວ ເພາະວ່າສິ່ງນີ້ແມ່ນກ່ຽວຂ້ອງກັບພຣະບັນຍັດແຫ່ງການຄຸ້ມຄອງຂອງເຮົາ. ສິ່ງນີ້ບໍ່ແມ່ນບັນຫາເລັກນ້ອຍ!

ຈົ່ງຍຶດເອົາເວລາໃດໜຶ່ງທີ່ເຈົ້າມີເພື່ອເຮັດທຸກສິ່ງທີ່ເຮົາໄດ້ແນະນຳໄວ້. ເຮົາຂໍເວົ້າມັນອີກຄັ້ງ ແລະ ນີ້ຖືວ່າເປັນການເຕືອນ: ຄົນຕ່າງຊາດກຳລັງຈະຫຼັ່ງໄຫຼເຂົ້າມາໃນປະເທດຈີນ. ສິ່ງນີ້ເປັນຄວາມຈິງຢ່າງແນ່ນອນ! ເຮົາຮູ້ວ່າ ຄົນສ່ວນຫຼາຍສົງໄສກ່ຽວກັບສິ່ງນີ້ ແລະ ບໍ່ໝັ້ນໃຈ ສະນັ້ນ ເຮົາຈຶ່ງເຕືອນພວກເຈົ້າຄັ້ງແລ້ວຄັ້ງເລົ່າ ເພື່ອວ່າພວກເຈົ້າຈະສະແຫວງຫາການເຕີບໂຕຂອງຊີວິດຢ່າງໄວວາ ແລະ ສາມາດຕອບສະໜອງຄວາມປະສົງຂອງເຮົາໄວຍິ່ງຂຶ້ນ. ເລີ່ມແຕ່ມື້ນີ້ເປັນຕົ້ນໄປ ສະຖານະການສາກົນຈະຍິ່ງເຄັ່ງຕຶງຂຶ້ນ ແລະ ຫຼາຍປະເທດຈະເລີ່ມພັງທະລາຍລົງຈາກພາຍໃນ. ໃນປະເທດຈີນ ມື້ແຫ່ງຄວາມສຸກແມ່ນກຳລັງຈະສິ້ນສຸດລົງ. ນີ້ໝາຍຄວາມວ່າ ກຳມະກອນຈະປະທ້ວງ, ນັກຮຽນຈະພາກັນຍ່າງອອກຈາກຫ້ອງຮຽນພວກເຂົາ, ນັກທຸລະກິດຈະເຊົາເຮັດທຸລະກິດ ແລະ ໂຮງງານທັງຫຼາຍຈະປິດຕົວລົງ ແລະ ບໍ່ສາມາດເອົາຕົວລອດໄດ້. ຜູ້ທີ່ເປັນແກນນຳຈະເລີ່ມກະກຽມເງິນຄຳເພື່ອຫຼົບໜີ (ນີ້ຈະເປັນຜົນປະໂຫຍດຕໍ່ແຜນການຄຸ້ມຄອງຂອງເຮົາເຊັ່ນກັນ) ແລະ ຜູ້ນຳລັດຖະບານກາງໃນທຸກລະດັບກໍຈະພາກັນຫຍຸ້ງກັບການໃສ່ໃຈໃນສິ່ງໃດສິ່ງໜຶ່ງທີ່ເຮັດໃຫ້ຄົນອື່ນສູນເສຍ ໃນຂະນະທີ່ພວກເຂົາທຸກຄົນໄດ້ກະກຽມ (ນີ້ຄືຜົນປະໂຫຍດໃນຂັ້ນຕອນຕໍ່ໄປ). ຈົ່ງເບິ່ງໃຫ້ດີ! ນີ້ແມ່ນສິ່ງທີ່ກ່ຽວພັນກັນທົ່ວຈັກກະວານ ບໍ່ແມ່ນແຕ່ປະເທດຈີນ

ຍ້ອນພາລະກິດຂອງເຮົາແນໃສ່ແຜ່ນດິນໂລກທັງໝົດ ແຕ່ເຖິງຢ່າງໃດກໍຕາມ ມັນກໍຍັງຢູ່ໃນວິທີການສ້າງກະສັດຈາກກຸ່ມຄົນທີ່ເປັນບຸດຊາຍກົກ. ເຈົ້າເຫັນສິ່ງນີ້ຢ່າງຊັດເຈນບໍ? ຈົ່ງຮີບຟ້າວສະແຫວງຫາເຖີດ! ເຮົາຈະບໍ່ປະຕິບັດຕໍ່ພວກເຈົ້າຢ່າງບໍ່ຍຸຕິທຳ; ເຮົາຈະຍອມໃຫ້ພວກເຈົ້າພົບກັບຄວາມສຸກຈົນເຈົ້າພໍໃຈ.

ການປະຕິບັດຂອງເຮົາເປັນຕາອັດສະຈັນ. ໃນຂະນະທີ່ໄພພິບັດອັນຍິ່ງໃຫຍ່ໃນແຜ່ນດິນໂລກກຳລັງເກີດຂຶ້ນ ແລະ ຂະນະດຽວກັນນັ້ນ ຜູ້ກະທຳການຊົ່ວຮ້າຍທັງຫຼາຍ ແລະ ຜູ້ປົກຄອງທີ່ກຳລັງໄດ້ຮັບການລົງໂທດ ຫຼື ເວົ້າໃຫ້ຊັດເຈນຫຼາຍກວ່ານັ້ນກໍຄື ເມື່ອຜູ້ກະທຳການຊົ່ວຮ້າຍທຸກຄົນທີ່ຢູ່ນອກຊື່ສຽງຂອງເຮົາໄດ້ທົນທຸກ, ເຮົາກໍຈະເລີ່ມປະທານພອນຂອງເຮົາໃຫ້ກັບພວກເຈົ້າ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງພຣະທຳທີ່ວ່າ "ພວກເຈົ້າຈະບໍ່ທົນທຸກກັບຄວາມເຈັບປວດ ຫຼື ອັນຕະລາຍຈາກໄພພິບັດຕ່າງໆຢ່າງແນ່ນອນ", ເຊິ່ງເຮົາໄດ້ກ່າວຊໍ້າແລ້ວຊໍ້າອີກໃນອາດີດ. ພວກເຈົ້າເຂົ້າໃຈສິ່ງນີ້ບໍ? ຄຳວ່າ "ເວລານີ້" ທີ່ເຮົາກ່າວນັ້ນ ແມ່ນໝາຍເຖິງເວລາເມື່ອພຣະທຳທີ່ຖືກກ່າວອອກມາຈາກປາກຂອງເຮົາ. ພາລະກິດຂອງພຣະວິນຍານບໍລິສຸດແມ່ນຖືກກະທຳຢ່າງໄວຫຼາຍ; ເຮົາຈະບໍ່ຊັກຊ້າ ຫຼື ເສຍເວລາໜຶ່ງນາທີ ຫຼື ແມ່ນແຕ່ສ່ຽວວິນາທີ. ກົງກັນຂ້າມ ເຮົາຈະປະຕິບັດຕາມພຣະທຳຂອງເຮົາ ທັນທີທີ່ພຣະທຳເຫຼົ່ານັ້ນຖືກກ່າວອອກມາ. ຖ້າເຮົາເວົ້າວ່າ ມື້ນີ້ ເຮົາກຳລັງກຳຈັດບາງຄົນ ຫຼື ເຮົາກຽດຊັງບາງຄົນ, ຄົນນັ້ນກໍຈະຈົບສິ້ນທັນທີທັນໃດ. ເວົ້າອີກຢ່າງກໍຄື ພຣະວິນຍານບໍລິສຸດຂອງເຮົາຈະຖືກດຶງອອກຈາກພວກເຂົາທັນທີ ແລະ ພວກເຂົາກໍຈະກາຍເປັນຄົນຕາຍທັງເປັນທີ່ໃຊ້ການບໍ່ໄດ້ທັງສິ້ນ. ຜູ້ຄົນດັ່ງກ່າວອາດຈະຍັງມີລົມຫາຍໃຈ, ຍ່າງ ແລະ ເວົ້າໄດ້ ແລະ ອາດຈະຍັງອະທິຖານຕໍ່ໜ້າເຮົາ ແຕ່ພວກເຂົາຈະບໍ່ເຂົ້າໃຈວ່າ ເຮົາໄດ້ຈາກພວກເຂົາໄປແລ້ວ. ພວກເຂົາຈະເປັນຄົນທີ່ໃຊ້ການບໍ່ໄດ້ຢ່າງທີ່ເຄີຍເປັນມາ. ສິ່ງນີ້ເປັນຈິງ ແລະ ແທ້ຈິງຢ່າງແນ່ນອນ.

ພຣະທຳຂອງເຮົາເປັນຕົວແທນໃຫ້ກັບມະນຸດທີ່ເຮົາເປັນ. ໃຫ້ຈື່ສິ່ງນີ້ໄວ້! ຢ່າສົງໄສເລີຍ; ເຈົ້າຕ້ອງໝັ້ນໃຈແທ້ໆ. ນີ້ແມ່ນເລື່ອງເປັນເລື່ອງຕາຍ! ນີ້ແມ່ນເລື່ອງທີ່ຈິງຈັງທີ່ສຸດ! ທັນທີທີ່ພຣະທຳຂອງເຮົາຖືກກ່າວອອກໄປ, ສິ່ງທີ່ເຮົາຕ້ອງການກະທຳແມ່ນໄດ້ເກີດຂຶ້ນແລ້ວ. ພຣະທຳທຸກຂໍ້ເຫຼົ່ານີ້ແມ່ນຕ້ອງຖືກກ່າວຜ່ານທາງພຣະບຸດຂອງເຮົາ. ມີໃຜແດ່ໃນທ່າມກາງພວກເຈົ້າທີ່ໄດ້ພິຈາລະນາຕໍ່ບັນຫານີ້ຢ່າງຈິງຈັງ? ເຮົາຈະສາມາດອະທິບາຍມັນແບບອື່ນໄດ້ແນວໃດ? ຈົ່ງເຊົາຢ້ານ ແລະ ເຊົາກັງວົນໃຈຕະຫຼອດເວລາ. ເຮົາເປັນຄົນທີ່ບໍ່ຄຳນຶງເຖິງຄວາມຮູ້ສຶກຂອງຜູ້ຄົນແທ້ບໍ? ເຮົາຈະປະຖິ້ມຄົນທີ່ເຮົາເຫັນດີນຳຢ່າງເສີຍເມີຍບໍ? ທຸກສິ່ງທີ່ເຮົາກະທຳແມ່ນມີຫຼັກການ. ເຮົາຈະບໍ່ທຳລາຍພະສັນຍາທີ່ເຮົາສ້າງຕັ້ງຂຶ້ນເອງ ຫຼື ເຮົາຈະບໍ່ຂັດຂວາງແຜນການຂອງເຮົາເອງ. ເຮົາບໍ່ໄດ້ໄຮ້ດຽງສາຄືກັບພວກເຈົ້າ. ພາລະກິດຂອງເຮົາເປັນສິ່ງທີ່ຍິ່ງໃຫຍ່; ມັນຄືສິ່ງທີ່ບໍ່ມີມະນຸດຄົນໃດສາມາດເຮັດສຳເລັດໄດ້. ເຮົາໄດ້ກ່າວໄວ້ແລ້ວວ່າ ເຮົາຊອບທຳ ແລະ ສຳລັບຄົນທີ່ຮັກເຮົາ, ເຮົາກໍຮັກ. ເຈົ້າບໍ່ເຊື່ອວ່າ ສິ່ງນີ້ແມ່ນຄວາມຈິງບໍ? ເຈົ້າສົງໄສຕະຫຼອດແທ້ໆ! ຖ້າເຈົ້າມີສາມັນສຳນຶກທີ່ຊັດເຈນ ກ່ຽວກັບທຸກສິ່ງ ແລ້ວເປັນຫຍັງເຈົ້າຍັງຢ້ານຫຼາຍຢູ່? ທັງໝົດມັນເປັນ ຍ້ອນວ່າເຈົ້າໄດ້ຜູກມັດຕົວເຈົ້າເອງ. ບຸດຊາຍຂອງເຮົາເອີຍ! ເຮົາໄດ້

ເຕືອນເຈົ້າຫຼາຍເທື່ອແລ້ວວ່າ ບໍ່ໃຫ້ເສົ້າໃຈ ຫຼື ຫຼັ່ງນໍ້າຕາ ເພາະວ່າ ເຮົາຈະບໍ່ປະຖິ້ມເຈົ້າ. ເຈົ້າຍັງບໍ່ສາມາດໄວ້ໃຈເຮົາໄດ້ບໍ? ເຮົາຈະຈັບເຈົ້າໄວ້ແໜ້ນໆ ແລະ ບໍ່ປ່ອຍໃຫ້ເຈົ້າໄປ. ເຮົາຈະກອດເຈົ້າໄວ້ດ້ວຍຄວາມຮັກຂອງເຮົາສະເໝີ. ເຮົາຈະດູແລເຈົ້າ, ປົກປ້ອງເຈົ້າ ແລະ ໃຫ້ຄວາມເປີດເຜີຍ ແລະ ຄວາມເຂົ້າໃຈໃນທຸກສິ່ງທຸກຢ່າງໃຫ້ກັບເຈົ້າ ເພື່ອວ່າເຈົ້າຈະສາມາດເຫັນວ່າ ເຮົາເປັນພຣະບິດາຂອງເຈົ້າ ແລະ ເຮົາຄືຜູ້ສະໜັບສະໜູນເຈົ້າ. ເຮົາຮູ້ວ່າເຈົ້າສິງໄສຢູ່ສະເໝີວ່າ ເຈົ້າຈະສາມາດແບ່ງເບົາພາລະທີ່ຢູ່ເທິງບ່າຂອງພຣະບິດາຂອງເຈົ້າໄດ້ແນວໃດ? ນີ້ແມ່ນພາລະທີ່ເຮົາໄດ້ມອບໃຫ້ກັບເຈົ້າ. ຢ່າພະຍາຍາມເມີນເສີຍກັບມັນ! ທຸກມື້ນີ້ມີຈັກຄົນທີ່ສາມາດຊື່ສັດກັບເຮົາ? ເຮົາຫວັງວ່າ ເຈົ້າຈະສາມາດເລັ່ງການຝຶກຝົນຂອງເຈົ້າ ແລະ ເຕີບໃຫຍ່ຂຶ້ນຢ່າງໄວວາ ແລະ ເຮັດໃຫ້ເຮົາພໍໃຈ. ພຣະບິດາເຮັດວຽກໜັກເພື່ອບຸດຊາຍທັງກາງເວັນ ແລະ ກາງຄືນ, ສະນັ້ນ ບຸດຊາຍກໍຄວນພິຈາລະນາເຖິງແຜນການຄຸ້ມຄອງຂອງພຣະບິດາໃນທຸກໆນາທີ ແລະ ທຸກໆວິນາທີ. ນີ້ແມ່ນການຮ່ວມມືກັນກັບເຮົາຢ່າງຫ້າວຫັນທີ່ເຮົາເຄີຍກ່າວໄວ້.

ນີ້ແມ່ນການກະທຳຂອງເຮົາທັງໝົດ. ເຮົາຈະວາງພາລະໃຫ້ກັບຄົນທີ່ເຮົາໃຊ້ໃນປັດຈຸບັນ ແລະ ມອບສະຕິປັນຍາໃຫ້ກັບພວກເຂົາ ເພື່ອວ່າການກະທຳທັງໝົດຂອງພວກເຂົາຈະສອດຄ່ອງກັບຄວາມປະສົງຂອງເຮົາ, ເພື່ອວ່າອານາຈັກຂອງເຮົາຈະໄດ້ກາຍເປັນຈິງ ແລະ ເພື່ອວ່າ ສະຫວັນ ແລະ ແຜ່ນດິນໂລກໃໝ່ຈະເປັນອັນໜຶ່ງອັນດຽວກັນ. ຄົນທີ່ເຮົາບໍ່ໃຊ້ແມ່ນກົງກັນຂ້າມຢ່າງສິ້ນເຊີງ; ພວກເຂົາຈະມຶນງົງຢູ່ສະເໝີ, ພວກເຂົາຈະນອນຫຼັງຈາກທີ່ພວກເຂົາກິນ ແລະ ພວກເຂົາຈະກິນຫຼັງຈາກທີ່ພວກເຂົານອນ ໂດຍບໍ່ຮູ້ເລີຍວ່າ ພາລະໝາຍເຖິງຫຍັງ. ຄົນດັ່ງກ່າວນີ້ຂາດພາລະກິດຂອງພຣະວິນຍານບໍລິສຸດ ແລະ ຄວນຖືກລຶບລ້າງອອກຈາກຄຣິດຕະຈັກຂອງເຮົາໃຫ້ໄວເທົ່າທີ່ຈະໄວໄດ້. ບັດນີ້ ເຮົາຈະກ່າວເຖິງບັນຫາບາງຢ່າງທີ່ກ່ຽວຂ້ອງກັບນິມິດ: ຄຣິດຕະຈັກແມ່ນເງື່ອນໄຂກ່ອນຈະເຂົ້າສູ່ອາຈານຈັກ; ຜູ້ຄົນສາມາດເຂົ້າສູ່ອານາຈັກຫຼັງຈາກທີ່ຄຣິດຕະຈັກຖືກສ້າງຂຶ້ນຈົນເຖິງຈຸດໃດໜຶ່ງເທົ່ານັ້ນ. ບໍ່ມີໃຜສາມາດເຂົ້າສູ່ອານາຈັກໂດຍກົງໄດ້ (ຖ້າເຮົາບໍ່ໄດ້ສັນຍາໄວ້). ຄຣິດຕະຈັກຄືບາດກ້າວທຳອິດ ແຕ່ມັນຄືອານາຈັກທີ່ເປັນເປົ້າໝາຍຂອງແຜນການຄຸ້ມຄອງຂອງເຮົາ. ທຸກສິ່ງທຸກຢ່າງຈະເປັນຮູບປະທຳຫຼັງຈາກທີ່ຜູ້ຄົນເຂົ້າສູ່ອານາຈັກ ແລະ ຈະບໍ່ມີຫຍັງທີ່ຕ້ອງຢ້ານ. ໃນປັດຈຸບັນ, ມີພຽງເຮົາ ແລະ ບຸດຊາຍກົກຂອງເຮົາເທົ່ານັ້ນທີ່ໄດ້ເຂົ້າສູ່ອານາຈັກ ແລະ ເລີ່ມປົກຄອງບັນດາຊົນຊາດ ແລະ ປະຊາຊົນ. ນັ້ນກໍຄືອານາຈັກຂອງເຮົາກຳລັງເລີ່ມຈັດຕັ້ງຢ່າງເປັນລະບຽບ ແລະ ທຸກຄົນທີ່ຈະເປັນກະສັດ ຫຼື ປະຊາຊົນຂອງເຮົາແມ່ນໄດ້ຖືກປະກາດຢ່າງເປີດເຜີຍແລ້ວ. ເຫດການໃນອະນາຄົດຈະຖືກບອກແກ່ພວກເຈົ້າແຕ່ລະຂັ້ນຕອນ ແລະ ຕາມລຳດັບ; ຢ່າໃຈຮ້ອນ ຫຼື ກັງວົນເກີນໄປ. ເຈົ້າຈື່ພຣະທຳທຸກຂໍ້ທີ່ເຮົາໄດ້ເວົ້າກັບເຈົ້າບໍ? ຖ້າເຈົ້າຈິງໃຈສຳລັບເຮົາ ແລ້ວເຮົາກໍຈະກ່າວຄວາມຈິງຢ່າງແທ້ຈິງຕໍ່ເຈົ້າ. ແຕ່ສຳລັບຄົນທີ່ປະພຶດດ້ວຍຄວາມຫຼອກລວງ ແລະ ຄວາມຄິດໂກງ, ເຮົາຈະຕອບແທນດ້ວຍການປະຕິບັດຕໍ່ພວກເຂົາພໍເປັນພິທີ ແລະ ເຮັດໃຫ້ພວກເຂົາເຫັນຢ່າງຊັດເຈນວ່າ ຍ້ອນໃຜແທ້ທີ່ການປະພຶດເຊັ່ນນັ້ນຖືກນຳໄປສູ່ການທຳລາຍລ້າງ!

# ບົດທີ 78

ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ວ່າເຮົາເປັນຜູ້ທີ່ປະຕິບັດພາລະກິດ ບໍ່ແມ່ນມະນຸດຄົນໃດເປັນຜູ້ປະຕິບັດ. ເມື່ອມີເຮົາ, ທຸກສິ່ງສະບາຍ ແລະ ມີຄວາມສຸກ, ແຕ່ເມື່ອມີພວກເຈົ້ານັ້ນ ສິ່ງຕ່າງໆກໍແຕກຕ່າງກັນຫຼາຍ; ພວກເຈົ້າປະສົບກັບຄວາມຫຍຸ້ງຍາກທີ່ສຸດໃນທຸກສິ່ງທີ່ພວກເຈົ້າເຮັດ. ສິ່ງທີ່ເຮົາເຫັນດີນຳ ເຮົາກໍຈະເຮັດໃຫ້ສຳເລັດຢ່າງແນ່ນອນ; ຜູ້ໃດກໍຕາມທີ່ເຮົາເຫັນດີນຳ ເຮົາກໍຈະເຮັດໃຫ້ສົມບູນ. ມະນຸດ: ຢ່າເຂົ້າມາຫຍຸ້ງກັບພາລະກິດຂອງເຮົາ! ພວກເຈົ້າພຽງແຕ່ຕ້ອງເຮັດໃນຂະນະທີ່ຕິດຕາມການນຳພາຂອງເຮົາ, ເຮັດສິ່ງທີ່ເຮົາຮັກ, ປະຕິເສດທຸກສິ່ງທີ່ເຮົາກຽດຊັງ, ຖອນຕົວອອກຈາກຄວາມຜິດບາບ ແລະ ໂຍນຕົວເຂົ້າສູ່ອ້ອມກອດແຫ່ງຄວາມຮັກຂອງເຮົາ. ເຮົາບໍ່ໄດ້ໂອ້ອວດກັບພວກເຈົ້າ ຫຼື ເຮົາກໍບໍ່ໄດ້ເວົ້າເກີນໄປດ້ວຍ; ນີ້ແມ່ນຄວາມຈິງແທ້ໆ. ຖ້າເຮົາເວົ້າວ່າເຮົາກຳລັງຈະທຳລາຍໂລກ, ແລ້ວໃນເວລາທີ່ພວກເຈົ້າກະພິບຕາ ໂລກກໍຈະກາຍເປັນຂີ້ເທົ່າ. ພວກເຈົ້າມັກຈະກັງວົນໃຈຫຼາຍເກີນໄປ ແລະ ເພີ່ມພາລະຂອງຕົນເອງ ໂດຍຢ້ານຢ່າງສຸດຊຶ້ງວ່າພຣະທຳຂອງເຮົານັ້ນວ່າງເປົ່າ. ສະນັ້ນ, ພວກເຈົ້າຈຶ່ງວຸ້ນວາຍພະຍາຍາມ "ຫາທາງອອກ" ໃຫ້ກັບເຮົາ. ຄົນຕາບອດເອີຍ! ຄົນໂງ່ຈ້າເອີຍ! ເຈົ້າບໍ່ຮູ້ຈັກແມ່ນແຕ່ຄຸນຄ່າຂອງຕົນເອງ ແຕ່ເຈົ້າພະຍາຍາມທີ່ຈະເປັນທີ່ປຶກສາຂອງເຮົາ. ເຈົ້າຄູ່ຄວນບໍ? ຈົ່ງແຍງແວ່ນເບິ່ງດີໆ!

ໃຫ້ເຮົາບອກບາງຢ່າງແກ່ເຈົ້າ! ຄົນຂີ້ຢ້ານຕ້ອງຖືກຂ້ຽນຕີຍ້ອນຄວາມຂີ້ຢ້ານຂອງຕົນ ໃນຂະນະທີ່ຄົນຊື່ສັດເປັນຢ່າງຍິ່ງຈະໄດ້ຮັບພອນຍ້ອນຄວາມເຊື່ອຂອງພວກເຂົາ. ເພື່ອໃຫ້ຊັດເຈນ, ປະເດັນທີ່ສຳຄັນທີ່ສຸດໃນຕອນນີ້ແມ່ນ ຄວາມເຊື່ອ. ກ່ອນທີ່ພອນທີ່ຈະມາເຖິງພວກເຈົ້າໄດ້ຖືກເປີດເຜີຍ, ຕອນນີ້ ພວກເຈົ້າຕ້ອງເສຍສະຫຼະທຸກສິ່ງເພື່ອສະຫຼະໃຫ້ແກ່ເຮົາ. ນີ້ແມ່ນລັກສະນະທີ່ "ການໄດ້ຮັບພອນ" ແລະ "ການທົນທຸກຕໍ່ໄພພິບັດອັນຍິ່ງໃຫຍ່" ໝາຍເຖິງຢ່າງແນ່ນອນ. ລູກຊາຍເອີຍ! ພຣະທຳຂອງເຮົາຍັງຝັງຢູ່ໃນໃຈຂອງເຈົ້າຢູ່ບໍ? "ສຳລັບຄົນທີ່ເສຍສະຫຼະເພື່ອເຮົາຢ່າງຈິງໃຈ, ເຮົາຈະອວຍພອນເຈົ້າຢ່າງຫຼວງຫຼາຍແນ່ນອນ". ປັດຈຸບັນນີ້, ເຈົ້າເຂົ້າໃຈຄວາມໝາຍທີ່ຢູ່ພາຍໃນແທ້ໆບໍ? ເຮົາບໍ່ກ່າວພຣະທຳທີ່ວ່າງເປົ່າ; ນັບແຕ່ນີ້ເປັນຕົ້ນໄປ ຈະບໍ່ມີຫຍັງຖືກປິດບັງອີກ. ນັ້ນກໍຄື ສິ່ງຕ່າງໆທີ່ເຄີຍຖືກປິດບັງໄວ້ໃນພຣະທຳຂອງເຮົາຈະຖືກບອກແກ່ພວກເຈົ້າເທື່ອລະຂໍ້ໃນຕອນນີ້ ໂດຍບໍ່ມີການປິດບັງໃດໆ. ຍິ່ງໄປກວ່ານັ້ນ, ພຣະທຳແຕ່ລະຂໍ້ຈະເປັນຄວາມໝາຍທີ່ແທ້ຈິງຂອງເຮົາ, ບໍ່ຕ້ອງກ່າວເຖິງວ່າ ການເປີດເຜີຍທຸກຄົນ, ເຫດການ ແລະ ສິ່ງຕ່າງໆທີ່ຖືກປິດບັງໄວ້ຕໍ່ໜ້າເຮົາຈະເຮັດໄດ້ຢ່າງງ່າຍດາຍ ແລະ ຈະບໍ່ຍາກເລີຍສຳລັບເຮົາ. ທຸກສິ່ງທີ່ເຮົາກະທຳແມ່ນປະກອບດ້ວຍລັກສະນະແຫ່ງຄວາມເປັນມະນຸດທີ່ທຳມະດາຂອງເຮົາ ລວມເຖິງລັກສະນະຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາດ້ວຍ. ພວກເຈົ້າມີຄວາມເຂົ້າໃຈທີ່ຊັດເຈນຢ່າງແທ້ຈິງຕໍ່ພຣະທຳເຫຼົ່ານີ້ບໍ? ນີ້ຄືເຫດຜົນວ່າເປັນຫຍັງເຮົາຈຶ່ງສືບຕໍ່ເນັ້ນຢ້ຳວ່າ ເຈົ້າບໍ່ຄວນຮີບຮ້ອນຫຼາຍເກີນໄປ. ການເປີດເຜີຍຄົນໆໜຶ່ງ ຫຼື ສິ່ງໜຶ່ງນັ້ນມັນບໍ່ໄດ້ຍາກສຳລັບເຮົາ ແລະ ມີເວລາສຳລັບມັນຢູ່ສະເໝີ. ບໍ່ແມ່ນແບບນັ້ນບໍ? ຫຼາຍຄົນໄດ້ເປີດເຜີຍລັກສະນະທີ່ແທ້ຈິງຂອງພວກເຂົາຕໍ່ໜ້າເຮົາ. ບໍ່ວ່າພວກເຂົາຈະເປັນໝາຈອກເກົ້າຫາງ, ໝາ ຫຼື ໝາປ່າ, ພວກມັນທັງໝົດລ້ວນແລ້ວແຕ່

ເປີດເຜີຍລັກສະນະທີ່ແທ້ຈິງຂອງພວກມັນໃນເວລາສະເພາະໃດໜຶ່ງທີ່ເຮົາໄດ້ກຳນົດໄວ້, ເພາະວ່າທຸກສິ່ງທີ່ເຮົາກະທຳແມ່ນສ່ວນໜຶ່ງໃນແຜນການຂອງເຮົາ. ໃນຈຸດນີ້ເຈົ້າຕ້ອງມີຄວາມເຂົ້າໃຈທີ່ຊັດເຈນຢ່າງສົມບູນ!

ເຈົ້າເຂົ້າໃຈແທ້ບໍວ່າ ຄຳເວົ້າທີ່ວ່າ "ເວລາຍັງອີກບໍ່ດົນ" ໝາຍເຖິງຫຍັງ? ໃນອະດີດ, ເຈົ້າຄິດຢູ່ສະເໝີວ່າ ມັນໝາຍເຖິງມື້ຂອງເຮົາ ແຕ່ພວກເຈົ້າທຸກຄົນໄດ້ຕີຄວາມໝາຍພຣະທຳຂອງເຮົາຕາມແນວຄິດຂອງພວກເຈົ້າ. ໃຫ້ເຮົາບອກເຈົ້າເສີຍ! ນັບແຕ່ນີ້ເປັນຕົ້ນໄປ, ຜູ້ໃດທີ່ຕີຄວາມໝາຍພຣະທຳຂອງເຮົາຜິດໆແມ່ນຄົນໂງ່ຢ່າງບໍ່ຕ້ອງສົງໄສ! ພຣະທຳທີ່ເຮົາກ່າວ "ເວລາຍັງອີກບໍ່ດົນ" ໝາຍເຖິງມື້ຂອງພວກເຈົ້າໃນການຊື່ນຊົມພຣະພອນ; ນັ້ນກໍຄື ມື້ທີ່ວິນຍານຊົ່ວຮ້າຍທັງໝົດຈະຖືກທຳລາຍ ແລະ ເຕະອອກຈາກຄຣິສຕະຈັກຂອງເຮົາ ແລະ ວິທີການເຮັດສິ່ງຕ່າງໆທັງໝົດຂອງມະນຸດຈະຖືກປະຕິເສດ. ຍິ່ງໄປກວ່ານັ້ນ, ສຳນວນນີ້ໝາຍເຖິງມື້ທີ່ໄພພິບັດອັນຍິ່ງໃຫຍ່ຕ່າງໆຈະລົງມາ. ຈົ່ງຈື່ຈຳສິ່ງນີ້ໄວ້! ມັນແມ່ນ ໄພພິບັດອັນຍິ່ງໃຫຍ່ທັງໝົດ; ຢ່າຕີຄວາມໝາຍນີ້ຢ່າງຜິດໆອີກຕໍ່ໄປ. ໄພພິບັດອັນຍິ່ງໃຫຍ່ຂອງເຮົາຈະລົງມາຈາກມືຂອງເຮົາສູ່ໂລກຈັກກະວານໃນເວລາດຽວກັນ. ບັນດາຜູ້ທີ່ໄດ້ຮັບນາມຊື່ຂອງເຮົາຈະໄດ້ຮັບພອນ ແລະ ຈະບໍ່ຕ້ອງທົນທຸກກັບຄວາມທຸກທໍລະມານເຊັ່ນນີ້ຢ່າງແນ່ນອນ. ເຈົ້າຍັງຈື່ສິ່ງນັ້ນໄດ້ບໍ? ເຈົ້າເຂົ້າໃຈສິ່ງທີ່ເຮົາກຳລັງເວົ້າເຖິງບໍ? ເວລາທີ່ເຮົາເວົ້າເຖິງແມ່ນເວລາທີ່ເຮົາເລີ່ມຕົ້ນປະຕິບັດພາລະກິດຢ່າງແນ່ນອນ (ເມື່ອໄພພິບັດອັນຍິ່ງໃຫຍ່ໄດ້ລົງມາໃນຊ່ວງເວລາດັ່ງກ່າວ). ພວກເຈົ້າບໍ່ໄດ້ເຂົ້າໃຈເຈດຕະນາຂອງເຮົາແທ້ໆ. ພວກເຈົ້າຮູ້ບໍວ່າເປັນຫຍັງເຮົາຈຶ່ງວາງຂໍ້ຮຽກຮ້ອງທີ່ເຂັ້ມງວດຕໍ່ພວກເຈົ້າ ໂດຍບໍ່ໄດ້ສະແດງຄວາມກະລຸນາໃດໆກັບພວກເຈົ້າເລີຍ? ທັນທີທີ່ສະຖານະການສາກົນເຄັ່ງຄຽດ ແລະ ໃນຂະນະທີ່ຜູ້ (ທີ່ເອີ້ນວ່າ) ມີອຳນາດໃນປະເທດຈີນກຳລັງດຳເນີນການກະກຽມທັງໝົດ, ນີ້ເປັນເວລາດຽວກັບທີ່ລະເບີດເວລາກຳລັງຈະລະເບີດອອກ. ບັນດາປະເທດທັງເຈັດທີ່ສະແຫວງຫາຫົນທາງທີ່ແທ້ຈິງຈະພຸ່ງເຂົ້າສູ່ປະເທດຈີນຢ່າງແຮງຄືກັບນໍ້າຜ່ານປະຕູລະບາຍນໍ້າ ໂດຍບໍ່ຄຳນຶງເຖິງຕົ້ນທຶນໃດໆ. ບາງຄົນກໍຖືກເຮົາເລືອກ ແລະ ຄົນອື່ນໆກໍແມ່ນເພື່ອໃຫ້ບໍລິການແກ່ເຮົາ, ແຕ່ບໍ່ມີລູກຊາຍກົກໃນບັນດາພວກເຂົາ. ນີ້ແມ່ນການກະທຳຂອງເຮົາ! ນີ້ແມ່ນການຈັດການທີ່ເຮັດສຳເລັດແລ້ວເມື່ອເຮົາສ້າງໂລກ. ຈົ່ງກຳຈັດແນວຄິດມະນຸດຂອງເຈົ້າເສີຍ. ຢ່າຖືວ່າເຮົາກຳລັງເວົ້າເລື່ອງໄຮ້ສາລະ! ສິ່ງທີ່ເຮົາຄິດເຖິງແມ່ນສິ່ງທີ່ເຮົາໄດ້ເຮັດສຳເລັດແລ້ວ ແລະ ແຜນການຂອງເຮົາແມ່ນສິ່ງທີ່ເຮົາໄດ້ເຮັດສຳເລັດແລ້ວເຊັ່ນກັນ. ເຈົ້າຊັດເຈນໃນເລື່ອງນີ້ບໍ?

ທຸກສິ່ງທຸກຢ່າງຂຶ້ນຢູ່ກັບຄວາມຄິດຂອງເຮົາ ແລະ ແຜນການຂອງເຮົາ. ລູກຊາຍຂອງເຮົາເອີຍ! ເຮົາເລືອກເຈົ້າເພາະເຫັນແກ່ເຈົ້າ ແລະ ຍິ່ງໄປກວ່ານັ້ນ ແມ່ນຍ້ອນເຮົາຮັກເຈົ້າ. ໃຜກໍຕາມທີ່ກ້າຄິດບໍ່ເຊື່ອຟັງ ຫຼື ກໍ່ໃຫ້ເກີດຄວາມອິດສາ ຈະຕາຍດ້ວຍຄຳສາບແຊ່ງ ແລະ ການເຜົາໄໝ້ຂອງເຮົາ. ສິ່ງນີ້ກ່ຽວຂ້ອງກັບບົດບັນຍັດການປົກຄອງຂອງອານາຈັກຂອງເຮົາ, ຍ້ອນວ່າອານາຈັກຂອງຍຸກນີ້ໄດ້ກໍ່ຕົວຂຶ້ນແລ້ວ. ແນວໃດກໍຕາມ, ລູກຊາຍຂອງເຮົາເອີຍ, ເຈົ້າຄວນລະມັດລະວັງ ແລະ ບໍ່ຄວນຖືວ່ານີ້ເປັນທຶນຮອນຊະນິດໜຶ່ງ. ເຈົ້າຄວນພິຈາລະນາເຖິງຫົວໃຈຂອງພຣະບິດາເຈົ້າ ແລະ ຜ່ານສິ່ງນີ້ ຈົ່ງຊື່ນຊົມ

ກັບຄວາມພະຍາຍາມອັນພາກພຽນຂອງພຣະບິດາຂອງເຈົ້າ. ຈາກເລື່ອງນີ້ ລູກຊາຍຂອງເຮົາຕ້ອງເຂົ້າໃຈວ່າຄົນແບບໃດທີ່ເຮົາຮັກຫຼາຍທີ່ສຸດ, ຄົນແບບໃດທີ່ເຮົາຮັກຮອງລົງມາ, ຄົນແບບໃດທີ່ເຮົາຊັງທີ່ສຸດ ແລະ ຄົນແບບໃດທີ່ເຮົາລັງກຽດ. ຢ່າເກັບຄວາມກົດດັນໄວ້ກັບຕົວເອງ. ບໍ່ວ່າເຈົ້າມີອຸປະນິໄສແບບໃດກໍຕາມ ມັນໄດ້ຖືກເຮົາຈັດຕຽມໄວ້ລ່ວງໜ້າແລ້ວ ແລະ ແມ່ນການເປີດເຜີຍເຖິງລັກສະນະໜຶ່ງຂອງອຸປະນິໄສອັນສັກສິດຂອງເຮົາ. ຈົ່ງໂຍນຄວາມວິຕົກກັງວົນຂອງເຈົ້າຖິ້ມເສຍ! ເຮົາບໍ່ມີຄວາມກຽດຊັງຕໍ່ເຈົ້າ. ເຮົາຄວນເວົ້າແນວໃດກ່ຽວກັບສິ່ງນີ້? ເຈົ້າຍັງບໍ່ເຂົ້າໃຈບໍ? ເຈົ້າຍັງຖືກຈຳກັດດ້ວຍຄວາມຢ້ານຂອງເຈົ້າບໍ? ຜູ້ໃດຈົ່ງຮັກພັກດີ, ຜູ້ໃດກະຕືລືລົ້ນ, ຜູ້ໃດຊື່ສັດ, ຜູ້ໃດຫຼອກລວງ, ເຮົາຮູ້ຈັກໝົດ, ຍ້ອນດັ່ງທີ່ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ວ່າ ເຮົາຮູ້ສະຖານະການຂອງໄພ່ພົນຄືກັບຫຼັງມືຂອງເຮົາ.

ໃນສາຍຕາຂອງເຮົາ, ທຸກສິ່ງໄດ້ຖືກສຳເລັດ ແລະ ຖືກເປີດເຜີຍມາດົນແລ້ວ. (ເຮົາແມ່ນພຣະເຈົ້າຜູ້ກວດສອບສ່ວນເລິກທີ່ສຸດໃນຫົວໃຈຂອງຜູ້ຄົນ; ຈຸດປະສົງຂອງເຮົາແມ່ນພຽງແຕ່ເຮັດໃຫ້ພວກເຈົ້າເຫັນເຖິງລັກສະນະຂອງຄວາມເປັນມະນຸດທຳມະດາຂອງເຮົາ). ແນວໃດກໍຕາມ, ຈາກທັດສະນະຂອງພວກເຈົ້າ ທັງໝົດຍັງຖືກປົດບັງໄວ້ ແລະ ບໍ່ມີຫຍັງຖືກເຮັດໃຫ້ສຳເລັດ. ນີ້ແມ່ນຍ້ອນຄວາມຈິງທີ່ວ່າພວກເຈົ້າບໍ່ຮູ້ຈັກເຮົາແທ້ໆ. ທຸກສິ່ງຢູ່ໃນມືຂອງເຮົາ, ທັງໝົດຢູ່ໃຕ້ຕີນຂອງເຮົາ ແລະ ຕາຂອງເຮົາກວດສອບທຸກສິ່ງ; ຜູ້ໃດສາມາດຫຼົບໜີຈາກການພິພາກສາຂອງເຮົາໄດ້? ບັນດາຜູ້ທີ່ບໍ່ສະອາດທັງໝົດ, ຜູ້ທີ່ມີສິ່ງປົດບັງຢູ່, ຜູ້ທີ່ຕັດສິນລັບຫຼັງເຮົາ, ຜູ້ທີ່ມີການຕໍ່ຕ້ານໃນຫົວໃຈຂອງພວກເຂົາ ແລະ ຄົນອື່ນໆອີກ, ທຸກຄົນເຫຼົ່ານີ້ທີ່ເຮົາຖືວ່າບໍ່ມີຄ່າໃນສາຍຕາຂອງເຮົາ ຕ້ອງຄຸເຂົ່າລົງຕໍ່ໜ້າເຮົາ ແລະ ປົດພາລະຕົວເອງເສຍ. ບາງເທື່ອ ຫຼັງຈາກທີ່ໄດ້ຍິນສິ່ງນີ້, ບາງຄົນຈະໄດ້ຮັບແຮງຈູງໃຈເລັກນ້ອຍ ໃນຂະນະທີ່ຄົນອື່ນໆຈະບໍ່ຖືວ່າສິ່ງນີ້ເປັນເລື່ອງທີ່ຮ້າຍແຮງ. ເຮົາຂໍເຕືອນພວກເຈົ້າ! ຄົນທີ່ມີສະຕິປັນຍາຈົ່ງຮີບຮ້ອນກັບໃຈເສຍ! ຖ້າເຈົ້າເປັນຄົນໂງ່, ແລ້ວເຈົ້າກໍຈົ່ງລໍຖ້າ! ເມື່ອເຖິງເວລາ ຈົ່ງເບິ່ງວ່າໃຜທີ່ຈະປະສົບກັບໄພພິບັດອັນຍິ່ງໃຫຍ່!

ສະຫວັນກໍຍັງເປັນສະຫວັນເດີມຢູ່ ແລະ ແຜ່ນດິນໂລກກໍຍັງເປັນແຜ່ນດິນໂລກເດີມຢູ່, ແຕ່ໃນມຸມມອງຂອງເຮົາ, ທັງສອງໄດ້ປ່ຽນໄປແລ້ວ ແລະ ບໍ່ແມ່ນສະຫວັນ ແລະ ແຜ່ນດິນໂລກແບບທີ່ພວກມັນເຄີຍເປັນອີກຕໍ່ໄປ. ສະຫວັນໝາຍເຖິງຫຍັງ? ເຈົ້າຮູ້ບໍ? ແລ້ວສະຫວັນໃນປັດຈຸບັນນີ້ເດໝາຍເຖິງຫຍັງ? ສະຫວັນໃນອະດີດໝາຍເຖິງຫຍັງ? ໃຫ້ເຮົາສື່ສານເລື່ອງນີ້ກັບພວກເຈົ້າ: ສະຫວັນໃນອະດີດໝາຍເຖິງພຣະເຈົ້າຜູ້ທີ່ພວກເຈົ້າເຊື່ອ ແຕ່ບໍ່ມີໃຜເຄີຍໄດ້ເຫັນ ແລະ ພຣະອົງແມ່ນພຣະເຈົ້າທີ່ຜູ້ຄົນເຊື່ອດ້ວຍຄວາມຈິງໃຈທີ່ແທ້ຈິງ (ຍ້ອນວ່າພວກເຂົາບໍ່ສາມາດເຫັນພຣະອົງໄດ້). ອີກດ້ານໜຶ່ງ, ສະຫວັນໃນປັດຈຸບັນໝາຍເຖິງທັງຄວາມເປັນມະນຸດທຳມະດາຂອງເຮົາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາດ້ວຍ; ນັ້ນກໍຄື ມັນໝາຍເຖິງພຣະເຈົ້າທີ່ແທ້ຈິງອົງນີ້. ທັງສອງພຣະອົງແມ່ນພຣະເຈົ້າອົງດຽວກັນ, ສະນັ້ນ ເປັນຫຍັງເຮົາຈຶ່ງເວົ້າວ່າເຮົາແມ່ນສະຫວັນໃໝ່? ສິ່ງນີ້ລ້ວນແລ້ວແຕ່ແນໃສ່ແນວຄິດຂອງມະນຸດ. ແຜ່ນດິນໂລກໃນປັດຈຸບັນໝາຍເຖິງບ່ອນທີ່ພວກເຈົ້າຢູ່. ແຜ່ນດິນໂລກໃນອະດີດບໍ່ມີແມ່ນແຕ່ສະຖານທີ່ດຽວທີ່ບໍລິສຸດ ໃນຂະນະທີ່ສະຖານທີ່ຕ່າງໆທີ່ພວກເຈົ້າຢ້ຽມຢາມໃນປັດຈຸບັນນີ້

ໄດ້ຖືກແຍກອອກໃຫ້ບໍລິສຸດ. ນີ້ແມ່ນເຫດຜົນທີ່ເຮົາເວົ້າວ່ານີ້ແມ່ນແຜ່ນດິນໂລກໃໝ່. “ໃໝ່” ໃນທີ່ນີ້ໝາຍເຖິງ “ບໍລິສຸດ”. ຕອນນີ້ ສະຫວັນໃໝ່ ແລະ ແຜ່ນດິນໂລກໃໝ່ໄດ້ເປັນຈິງຢ່າງສົມບູນແລ້ວ. ຕອນນີ້ ເຈົ້າເຂົ້າໃຈແລ້ວບໍ? ເຮົາຈະເປີດເຜີຍຄວາມລຶກລັບທັງໝົດໃຫ້ແກ່ພວກເຈົ້າເທື່ອລະໜ້າ. ຢ່າຮີບຮ້ອນ ແລະ ແມ່ນແຕ່ຄວາມລຶກລັບທີ່ຍິ່ງໃຫຍ່ກວ່າກໍຈະຖືກເປີດເຜີຍໃຫ້ແກ່ພວກເຈົ້າ!

# ບົດທີ 79

ຄົນຕາບອດເອີຍ! ຄົນໂງ່ເອີຍ! ກອງຂີ້ເຫຍື້ອທີ່ບໍ່ມີຄ່າເອີຍ! ພວກເຈົ້າແຍກຄວາມເປັນມະນຸດທຳມະດາຂອງເຮົາອອກຈາກຄວາມເປັນພຣະເຈົ້າຂອງເຮົາ! ພວກເຈົ້າບໍ່ເຫັນບໍວ່ານີ້ເປັນບາບຕໍ່ເຮົາ? ຍິ່ງໄປກວ່ານັ້ນ, ມັນແມ່ນບາງສິ່ງທີ່ຍາກຈະໃຫ້ອາໄພ! ມື້ນີ້ພຣະເຈົ້າທີ່ແທ້ຈິງໄດ້ມາທ່າມກາງພວກເຈົ້າ, ແຕ່ພວກເຈົ້າຮູ້ພຽງແຕ່ດ້ານດຽວຂອງເຮົາເທົ່ານັ້ນ ນັ້ນກໍຄືຄວາມເປັນມະນຸດທຳມະດາຂອງເຮົາ ແລະ ບໍ່ເຫັນດ້ານທີ່ເປັນພຣະເຈົ້າທັງໝົດຂອງເຮົາ. ເຈົ້າຄິດວ່າເຮົາບໍ່ຮູ້ວ່າໃຜສໍ້ໂກງເຮົາລັບຫຼັງເຮົາບໍ? ເຮົາບໍ່ໄດ້ກຳລັງວິຈານເຈົ້າ; ເຮົາພຽງແຕ່ກຳລັງເຝົ້າເບິ່ງເພື່ອເບິ່ງວ່າເຈົ້າສາມາດບັນລຸເຖິງຂັ້ນໃດ ແລະ ເພື່ອເບິ່ງວ່າໃນທີ່ສຸດແລ້ວເຈົ້າຈະຈົບລົງດ້ວຍວິທີໃດ. ພຣະທຳຂອງເຮົາໄດ້ຖືກກ່າວເປັນຮ້ອຍເປັນພັນຄັ້ງ, ແຕ່ພວກເຈົ້າໄດ້ເຮັດສິ່ງທີ່ບໍ່ດີຫຼາຍຢ່າງ. ເປັນຫຍັງພວກເຈົ້າຈຶ່ງພະຍາຍາມໂກງເຮົາຊໍ້າແລ້ວຊໍ້າອີກ. ຈົ່ງລະວັງການສູນເສຍຊີວິດຂອງເຈົ້າ! ຖ້າເຈົ້າກະຕຸ້ນຄວາມໂກດຮ້າຍຂອງເຮົາຈົນເຖິງລະດັບໜຶ່ງ, ເຮົາກໍຈະບໍ່ສະແດງຄວາມເມດຕາຕໍ່ເຈົ້າ ແລະ ເຈົ້າກໍຈະຖືກໄລ່ອອກ. ເຮົາຈະບໍ່ຄຳນຶງວ່າເຈົ້າເຄີຍເປັນແນວໃດມາກ່ອນ, ບໍ່ວ່າເຈົ້າຈະຊື່ສັດ ຫຼື ອຸທິດຕົນ, ບໍ່ວ່າເຈົ້າຈະໄດ້ແລ່ນໄປມາຫຼາຍປານໃດ ຫຼື ເຈົ້າໄດ້ຈ່າຍໃຫ້ເຮົາຫຼາຍປານໃດກໍຕາມ; ເຮົາຈະບໍ່ແນມເບິ່ງສິ່ງເຫຼົ່ານີ້ເລີຍ. ຕອນນີ້ເຈົ້າຕ້ອງການພຽງແຕ່ທ້າທາຍເຮົາ ແລະ ເຮົາກໍຈະໂຍນເຈົ້າລົງສູ່ຂຸມເລິກ. ໃຜຍັງກ້າພະຍາຍາມສໍ້ໂກງເຮົາອີກບໍ? ຈົ່ງຈື່ຈຳສິ່ງນີ້ເອົາໄວ້! ນັບຕັ້ງແຕ່ນີ້ໄປ, ເມື່ອໃດກໍຕາມທີ່ເຮົາໂກດຮ້າຍ, ບໍ່ວ່າຈະແມ່ນກັບໃຜກໍຕາມ, ເຮົາກໍຈະກວາດລ້າງເຈົ້າທັນທີເພື່ອວ່າຈະບໍ່ມີບັນຫາໃນອະນາຄົດ ແລະ ເພື່ອວ່າເຮົາຈະບໍ່ຕ້ອງເຫັນເຈົ້າອີກຕໍ່ໄປ. ຖ້າເຈົ້າທ້າທາຍເຮົາ, ເຮົາກໍຈະຂ້ຽນຕີເຈົ້າທັນທີ. ພວກເຈົ້າຈົດຈຳສິ່ງນີ້ໄວ້ໃນໃຈບໍ? ຄົນທີ່ສະຫຼາດທ່າມກາງພວກເຈົ້າຄວນກັບໃຈທັນທີ.

ມື້ນີ້, ໝາຍຄວາມວ່າ ຕອນນີ້ເຮົາກຳລັງໂກດຮ້າຍ. ພວກເຈົ້າທຸກຄົນຄວນຊື່ສັດຕໍ່ເຮົາ ແລະ ຖວາຍຕົນຕົວຂອງພວກເຈົ້າທັງໝົດໃຫ້ແກ່ເຮົາ. ເຈົ້າບໍ່ຕ້ອງຊັກຊ້າອີກຕໍ່ໄປ. ຖ້າເຈົ້າບໍ່ໃສ່ໃຈພຣະທຳຂອງເຮົາ, ເຮົາກໍຈະຍື່ນມືເຮົາອອກ ແລະ ໂຈມຕີເຈົ້າ. ການເຮັດດັ່ງນີ້ ເຮົາຈະເຮັດໃຫ້ໂຕເຮົາເອງເປັນທີ່ຮູ້ຈັກຕໍ່ທຸກຄົນ; ໃນມື້ນີ້ ເຮົາໂກດຮ້າຍ ແລະ ສະຫງ່າຜ່າເຜີຍຕໍ່ທຸກຄົນ (ເຊິ່ງຮ້າຍແຮງຍິ່ງກວ່າການພິພາກສາຂອງເຮົາອີກ). ເຮົາໄດ້ກ່າວພຣະທຳຫຼາຍຂໍ້ ແຕ່ພວກເຈົ້າກໍບໍ່ມີປະຕິກິລິຍາຫຍັງເລີຍ; ພວກເຈົ້າເປັນຄົນອັບປັນຍາແທ້ບໍ? ເຮົາບໍ່ຄິດວ່າພວກເຈົ້າເປັນ. ນີ້ແມ່ນມານຮ້າຍເກົ່າແກ່ທີ່ຢູ່ໃນຕົວພວກເຈົ້າທີ່ປະພຶດຕົວບໍ່ດີ. ພວກເຈົ້າເຫັນສິ່ງນີ້ຢ່າງຊັດເຈນບໍ? ຈົ່ງຮີບຟ້າວປ່ຽນແປງທັງໝົດ! ມື້ນີ້ ພາລະກິດຂອງພຣະວິນຍານບໍລິສຸດໄດ້ຄືບໜ້າມາຮອດຂັ້ນຕອນນີ້; ພວກເຈົ້າບໍ່ໄດ້ເຫັນມັນບໍ? ຊື່ຂອງເຮົາຈະແຜ່ຂະຫາຍໄປຈາກເຮືອນສູ່ເຮືອນ, ໃນທຸກປະເທດ ແລະ ໃນທຸກທິດທາງ ແລະ ຈະຖືກເອີ້ນຂານຈາກປາກຂອງຜູ້ໃຫຍ່ ແລະ ພ້ອມທັງເດັກນ້ອຍໃນທົ່ວໂລກຈັກກະວານ; ນີ້ແມ່ນຄວາມຈິງທີ່ແນ່ນອນ. ເຮົາແມ່ນພຣະເຈົ້າທີ່ເປັນເອກະລັກ ແລະ ຍິ່ງໄປກວ່ານັ້ນ ເຮົາຄືຕົວຕົນໜຶ່ງດຽວຂອງພຣະເຈົ້າ. ແຮງຍິ່ງໄປກວ່ານັ້ນ, ເຮົາແມ່ນທັງໝົດຂອງເນື້ອໜັງ ແລະ ເຮົາແມ່ນການສະແດງອອກທັງໝົດຂອງພຣະເຈົ້າ.

ໃຜກໍຕາມທີ່ກ້າບໍ່ເຄົາລົບເຮົາ, ໃຜກໍຕາມທີ່ກ້າສະແດງການຕໍ່ຕ້ານໃນສາຍຕາຂອງພວກເຂົາ ແລະ ໃຜກໍຕາມທີ່ກ້າກ່າວຄຳເວົ້າທ້າທາຍຕໍ່ເຮົາຈະຕ້ອງຕາຍຈາກການສາບແຊ່ງ ແລະ ຄວາມໂກດຮ້າຍຂອງເຮົາຢ່າງແນ່ນອນ (ຈະມີການສາບແຊ່ງຍ້ອນຄວາມໂກດຮ້າຍຂອງເຮົາ). ຍິ່ງໄປກວ່ານັ້ນ, ໃຜກໍຕາມກ້າທີ່ຈະບໍ່ຊື່ສັດ ຫຼື ກະຕັນຍູຕໍ່ເຮົາ ແລະ ໃຜກໍຕາມທີ່ກ້າພະຍາຍາມລໍ້ລວງເຮົາຈະຕາຍຈາກຄວາມກຽດຊັງຂອງເຮົາຢ່າງແນ່ນອນ. ຄວາມຊອບທຳ, ເດຊານຸພາບ ແລະ ການພິພາກສາຂອງເຮົາຈະຄົງຢູ່ຕະຫຼອດໄປເປັນນິດ. ຕອນທຳອິດ, ເຮົາໜ້າຮັກ ແລະ ມີເມດຕາ, ແຕ່ນີ້ບໍ່ແມ່ນອຸປະນິໄສຂອງຄວາມເປັນພຣະເຈົ້າຢ່າງສົມບູນຂອງເຮົາ; ຄວາມຊອບທຳ, ເດຊານຸພາບ ແລະ ການພິພາກສາພຽງປະກອບໄປດ້ວຍອຸປະນິໄສຂອງເຮົາຜູ້ທີ່ເປັນພຣະເຈົ້າເອງຢ່າງສົມບູນ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ເຮົາໜ້າຮັກ ແລະ ມີເມດຕາ. ຍ້ອນພາລະກິດທີ່ເຮົາຕ້ອງເຮັດໃຫ້ສຳເລັດ, ເຮົາມີຄວາມຮັກກະລຸນາ ແລະ ຄວາມເມດຕາ; ຢ່າງໃດກໍຕາມ, ຫຼັງຈາກນັ້ນກໍບໍ່ຈຳເປັນສຳລັບສິ່ງນັ້ນອີກ (ແລະ ບໍ່ມີເຄີຍມີຕັ້ງແຕ່ນັ້ນມາ). ມັນລ້ວນແລ້ວແຕ່ແມ່ນຄວາມຊອບທຳ, ເດຊານຸພາບ ແລະ ການພິພາກສາ ແລະ ນີ້ຄືອຸປະນິໄສທີ່ສົມບູນຂອງຄວາມເປັນມະນຸດທຳມະດາຂອງເຮົາ ຄຽງຄູ່ກັບຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາ.

ບັນດາຜູ້ທີ່ບໍ່ຮູ້ຈັກເຮົາຈະພິນາດຢູ່ໃນຂຸມເລິກທີ່ສຸດ, ໃນຂະນະທີ່ບັນດາຜູ້ທີ່ໝັ້ນໃຈກ່ຽວກັບເຮົາຈະມີຊີວິດຢູ່ຕະຫຼອດໄປ, ໄດ້ຮັບການດູແລ ແລະ ໄດ້ຮັບການປົກປ້ອງຢູ່ພາຍໃນຄວາມຮັກຂອງເຮົາ. ທັນທີທີ່ເຮົາກ່າວພຣະທຳໜຶ່ງຂໍ້ອອກມາ, ທົ່ວຈັກກະວານ ແລະ ສຸດແຜ່ນດິນໂລກສັ່ນສະເທືອນ. ໃຜແດ່ທີ່ສາມາດໄດ້ຍິນພຣະທຳຂອງເຮົາ ແລະ ບໍ່ສັ່ນເຊັນດ້ວຍຄວາມຢຳເກງ? ໃຜແດ່ທີ່ສາມາດເຕັມໄປດ້ວຍຄວາມເຄົາລົບສຳລັບເຮົາໄດ້? ໃຜແດ່ທີ່ບໍ່ສາມາດຮູ້ຈັກຄວາມຊອບທຳ ແລະ ເດຊານຸພາບຂອງເຮົາຈາກການກະທຳຂອງເຮົາ! ໃຜແດ່ທີ່ບໍ່ສາມາດເຫັນລິດທານຸພາບສູງສຸດ ແລະ ສະຕິປັນຍາຂອງເຮົາພາຍໃນການກະທຳຂອງເຮົາ! ໃຜກໍຕາມທີ່ບໍ່ໃສ່ໃຈຈະຕາຍຢ່າງແນ່ນອນ. ນີ້ກໍຍ້ອນວ່າ ບັນດາຜູ້ທີ່ບໍ່ໃສ່ໃຈຄືຜູ້ທີ່ຕໍ່ຕ້ານເຮົາ ແລະ ຄືຜູ້ທີ່ບໍ່ຮູ້ຈັກເຮົາ; ພວກເຂົາແມ່ນເທວະທູດ ແລະ ເປັນຜູ້ທີ່ປ່າເຖື່ອນທີ່ສຸດ. ຈົ່ງກວດສອບຕົວພວກເຈົ້າເອງ: ໃຜກໍຕາມທີ່ເປັນຜູ້ທີ່ປ່າເຖື່ອນທີ່ສຸດ, ເປັນຄົນທີ່ຖືວ່າຕົນເອງຊອບທຳ, ທະນົງຕົວ ແລະ ອວດດີແມ່ນເປົ້າໝາຍຂອງຄວາມກຽດຊັງຂອງເຮົາຢ່າງແນ່ນອນ ແລະ ຈະຕ້ອງພິນາດ!

ຕອນນີ້ເຮົາປະກາດພຣະດຳລັດຂອງອານາຈັກຂອງເຮົາ: ທຸກສິ່ງຢູ່ພາຍໃນການພິພາກສາຂອງເຮົາ, ທຸກສິ່ງຢູ່ພາຍໃນຄວາມຊອບທຳຂອງເຮົາ, ທຸກສິ່ງຢູ່ພາຍໃນເດຊານຸພາບຂອງເຮົາ ແລະ ເຮົາປະຕິບັດຄວາມຊອບທຳຂອງເຮົາກັບທຸກຄົນ. ບັນດາຜູ້ທີ່ເວົ້າວ່າພວກເຂົາເຊື່ອໃນເຮົາ ແຕ່ໃນສ່ວນເລິກແລ້ວ ພວກເຂົາຂັດແຍ້ງເຮົາ ຫຼື ບັນດາຜູ້ທີ່ຫົວໃຈຂອງພວກເຂົາໄດ້ປະຖິ້ມເຮົາຈະຖືກຂັບໄລ່ອອກ, ແຕ່ວ່າ ທັງໝົດຢູ່ໃນເວລາທີ່ເໝາະສົມຂອງເຮົາເອງ. ຄົນທີ່ເວົ້າສຽດສີກ່ຽວກັບເຮົາ ແຕ່ໃນທາງທີ່ຄົນອື່ນບໍ່ໄດ້ສັງເກດ ຈະຕາຍທັນທີ (ພວກເຂົາຈະພິນາດທັງວິນຍານ, ຮ່າງກາຍ ແລະ ຈິດວິນຍານ). ບັນດາຜູ້ທີ່ກົດຂີ່ ຫຼື ເຮັດໂຕໜ້າລັງກຽດຕໍ່ຜູ້ເປັນທີ່ຮັກຂອງເຮົາຈະຖືກພິພາກສາທັນທີໂດຍຄວາມໂກດຮ້າຍຂອງເຮົາ. ນີ້ໝາຍຄວາມວ່າຄົນທີ່ອິດສາຄົນທີ່ເຮົາຮັກ ແລະ ຜູ້ທີ່ຄິດວ່າເຮົາບໍ່ຍຸຕິທຳ ຈະຖືກ

ມອບໃຫ້ຖືກພິພາກສາໂດຍຜູ້ທີ່ເປັນທີ່ຮັກຂອງເຮົາ. ທຸກຄົນທີ່ປະພຶດດີ, ລຽບງ່າຍ ແລະ ສັດຊື່ (ລວມເຖິງຜູ້ທີ່ຂາດສະຕິປັນຍາ) ແລະ ຜູ້ທີ່ປະຕິບັດຕໍ່ເຮົາດ້ວຍຄວາມຈິງໃຈຢ່າງຈິດໜຶ່ງໃຈດຽວຈະຄົງຢູ່ໃນອານາຈັກຂອງເຮົາທັງໝົດ. ຜູ້ທີ່ບໍ່ໄດ້ຜ່ານການຝຶກອົບຮົມ, ໝາຍຄວາມວ່າ ບັນດາຄົນສັດຊື່ທີ່ຂາດສະຕິປັນຍາ ແລະ ຄວາມເຂົ້າໃຈຈະມີອຳນາດໃນອານາຈັກຂອງເຮົາ. ຢ່າງໃດກໍຕາມ, ພວກເຂົາກໍຍັງຖືກຈັດການ ແລະ ແຕກຫັກເຊັ່ນກັນ. ພວກເຂົາບໍ່ໄດ້ຜ່ານການຝຶກອົບຮົມບໍ່ແມ່ນສິ່ງແນ່ນອນ. ກົງກັນຂ້າມ, ມັນແມ່ນຜ່ານສິ່ງເຫຼົ່ານີ້ທີ່ເຮົາຈະສະແດງໃຫ້ທຸກຄົນເຫັນຄວາມຊົງລິດທານຸພາບສູງສຸດຂອງເຮົາ ແລະ ສະຕິປັນຍາຂອງເຮົາ. ເຮົາຈະຂັບໄລ່ທຸກຄົນທີ່ຍັງສົງໄສເຮົາ; ເຮົາບໍ່ຕ້ອງການພວກເຂົາແມ່ນແຕ່ຄົນດຽວ (ເຮົາກຽດຊັງຄົນທີ່ຍັງສົງໄສເຮົາໃນເວລາເຊັ່ນນີ້). ໂດຍວິທີການກະທຳທີ່ເຮົາກະທຳທົ່ວທັງຈັກກະວານ, ເຮົາຈະສະແດງໃຫ້ຄົນສັດຊື່ເຫັນຄວາມມະຫັດສະຈັນແຫ່ງການກະທຳຂອງເຮົາ, ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ສະຕິປັນຍາ, ການຢັ່ງຮູ້ ແລະ ການໄຈ້ແຍກຂອງພວກເຂົາເຕີບໃຫຍ່ຂຶ້ນ. ເຮົາຍັງຈະເຮັດໃຫ້ຄົນຫຼອກລວງຖືກທຳລາຍໃນທັນທີຍ້ອນການກະທຳຢ່າງມະຫັດສະຈັນຂອງເຮົາ. ລູກຊາຍກົກທັງໝົດຜູ້ທີ່ເປັນຄົນທຳອິດທີ່ຍອມຮັບຊື່ຂອງເຮົາ (ໝາຍເຖິງບັນດາຜູ້ທີ່ບໍລິສຸດ ແລະ ບໍ່ມີມົນທິນ, ເປັນຄົນສັດຊື່) ຈະເປັນຜູ້ທຳອິດທີ່ໄດ້ຮັບການເຂົ້າສູ່ອານາຈັກ ແລະ ປົກຄອງເໜືອທຸກຊາດ ແລະ ທຸກຄົນຄຽງຂ້າງກັນກັບເຮົາ, ປົກຄອງຄືດັ່ງກະສັດໃນອານາຈັກ ແລະ ພິພາກສາທຸກຊາດ ແລະ ທຸກຄົນ (ນີ້ໝາຍເຖິງລູກຊາຍກົກທຸກຄົນໃນອານາຈັກ ແລະ ບໍ່ແມ່ນຄົນອື່ນໆ). ບັນດາຜູ້ທີ່ຢູ່ທ່າມກາງທຸກຊາດ ແລະ ທຸກຄົນທີ່ຖືກພິພາກສາ ແລະ ຜູ້ທີ່ໄດ້ກັບໃຈ ຈະເຂົ້າສູ່ອານາຈັກຂອງເຮົາ ແລະ ກາຍເປັນຄົນຂອງເຮົາ, ໃນຂະນະທີ່ບັນດາຜູ້ທີ່ດື້ດ້ານ ແລະ ບໍ່ກັບໃຈຈະຖືກຖິ້ມລົງສູ່ຂຸມເລິກທີ່ສຸດ (ເພື່ອພິນາດຕະຫຼອດການ). ການພິພາກສາໃນອານາຈັກຈະແມ່ນຄັ້ງສຸດທ້າຍ ແລະ ມັນຈະແມ່ນການຊຳລະລ້າງໂລກຂອງເຮົາຢ່າງລະອຽດ. ຫຼັງຈາກນັ້ນກໍຈະບໍ່ມີຄວາມອະຍຸຕິທຳ, ຄວາມເສົ້າໂສກ, ນໍ້າຕາ ຫຼື ຄໍ່າຄວນອີກຕໍ່ໄປ, ຍິ່ງໄປກວ່ານັ້ນ ຈະບໍ່ມີໂລກອີກຕໍ່ໄປ. ທຸກສິ່ງຈະເປັນການສະແດງອອກຂອງພຣະຄຣິດ ແລະ ທຸກສິ່ງຈະເປັນອານາຈັກຂອງພຣະຄຣິດ. ຊ່າງສະຫງ່າລາສີແທ້ໆ! ຊ່າງສະຫງ່າລາສີແທ້ໆ!

# ບົດທີ 80

ໃນທຸກສິ່ງ, ການສື່ສານທີ່ແທ້ຈິງກັບເຮົາແມ່ນຈຳເປັນສຳລັບຄົນທີ່ຈະຖືກສ່ອງແສງສະຫວ່າງ ແລະ ໄດ້ຮັບແສງເຍືອງທາງ; ມີພຽງຜ່ານສິ່ງນີ້ເທົ່ານັ້ນວິນຍານຈຶ່ງຈະສາມາດຢູ່ຢ່າງສະຫງົບສຸກ. ບໍ່ດັ່ງນັ້ນ, ວິນຍານກໍຈະບໍ່ມີຄວາມສະຫງົບສຸກ. ປັດຈຸບັນ, ການເຈັບປ່ວຍທີ່ແສນສາຫັດທີ່ສຸດທ່າມກາງພວກເຈົ້າໄດ້ແຍກຄວາມເປັນມະນຸດທຳມະດາຂອງເຮົາຈາກຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາ; ຍິ່ງໄປກວ່ານັ້ນ, ພວກເຈົ້າສ່ວນໃຫຍ່ເນັ້ນໃສ່ຄວາມເປັນມະນຸດທຳມະດາຂອງເຮົາ, ຄືກັບພວກເຈົ້າບໍ່ເຄີຍຮູ້ວ່າເຮົາມີຄວາມເປັນພຣະເຈົ້າທີ່ສົມບູນ. ນີ້ແມ່ນດູໝິ່ນເຮົາ! ພວກເຈົ້າຮູ້ບໍ? ຄວາມເຈັບປ່ວຍຂອງພວກເຈົ້ານັ້ນສາຫັດຫຼາຍ ຖ້າວ່າພວກເຈົ້າບໍ່ຮີບຮ້ອນ ແລະ ຟື້ນຟູມັນ, ພວກເຈົ້າຈະຖືກຂ້າດ້ວຍມືຂອງເຮົາ. ຕໍ່ໜ້າເຮົາພວກເຈົ້າປະພຶດຕົວແບບໜຶ່ງ (ປາກົດວ່າເປັນຄົນມີກຽດ; ຖ່ອມຕົວ ແລະ ມີຄວາມອົດທົນ), ແຕ່ລັບຫຼັງເຮົາ ພວກເຈົ້າປະພຶດຕົນແຕກຕ່າງຢ່າງສິ້ນເຊີງ (ໜ້າຊື່ໃຈຄົດທັງໝົດ, ໄຮ້ສິນລະທຳ ແລະ ບໍ່ມີລະບຽບວິໄນ, ເຮັດສິ່ງໃດກໍຕາມທີ່ເຈົ້າຢາກເຮັດ, ສ້າງພັກພວກ, ຕັ້ງອານາຈັກທີ່ເປັນເອກະລາດ, ປາດຖະໜາທີ່ຈະທໍລະຍົດເຮົາ). ພວກເຈົ້າຕາບອດ! ຈົ່ງເປີດຕາຂອງພວກເຈົ້າທີ່ຖືກເລືອມຕາໂດຍຊາຕານນັ້ນອອກ! ຈົ່ງເບິ່ງວ່າ ແທ້ຈິງແລ້ວ ເຮົາແມ່ນໃຜ! ພວກເຈົ້າບໍ່ມີຄວາມອັບອາຍ! ພວກເຈົ້າບໍ່ຮູ້ວ່າການກະທຳຂອງເຮົານັ້ນໜ້າອັດສະຈັນ! ພວກເຈົ້າບໍ່ຮູ້ຈັກລິດທານຸພາບສູງສຸດຂອງເຮົາ! ໃຜສາມາດເວົ້າໄດ້ວ່າ ຮັບໃຊ້ພຣະຄຣິດໃນຂະນະທີ່ຍັງບໍ່ທັນຖືກຊ່ວຍໃຫ້ລອດພົ້ນແດ່? ເຈົ້າບໍ່ຮູ້ວ່າເຈົ້າກຳລັງຫຼິ້ນບົດບາດຫຍັງຢູ່! ແທ້ຈິງແລ້ວເຈົ້າມາຢູ່ຕໍ່ໜ້າເຮົາດ້ວຍການປອມຕົວ, ໂອ້ອວດສະເໜ່ຂອງເຈົ້າ, ເຈົ້າຜູ້ເຄະຮ້າຍ! ເຮົາຈະເຕະເຈົ້າອອກຈາກເຮືອນຂອງເຮົາ; ເຮົາບໍ່ໃຊ້ຄົນແບບນີ້, ເພາະວ່າເຮົາບໍ່ໄດ້ກຳນົດພວກເຂົາໄວ້ລ່ວງໜ້າ ແລະ ບໍ່ໄດ້ເລືອກພວກເຂົາ.

ເຮົາເຮັດສິ່ງທີ່ເຮົາກ່າວ. ບັນດາຜູ້ທີ່ເຮັດຄວາມຊົ່ວບໍ່ຕ້ອງຢ້ານ; ເຮົາບໍ່ໄດ້ເຮັດຜິດຕໍ່ໃຜ. ເຮົາປະຕິບັດຕາມແຜນຂອງເຮົາສະເໝີ ແລະ ເຮັດສິ່ງຕ່າງໆຕາມຄວາມຊອບທຳຂອງເຮົາ. ຍ້ອນວ່າບັນດາຜູ້ທີ່ເຮັດຊົ່ວໄດ້ເປັນລູກຫຼານຂອງຊາຕານນັບຕັ້ງແຕ່ການຊົງສ້າງແລ້ວ, ເຮົາບໍ່ໄດ້ເລືອກພວກເຂົາ; ນີ້ແມ່ນຄວາມໝາຍຂອງການເວົ້າວ່າ: "ເຖິງວ່າພູເຂົາ ແລະ ແມ່ນໍ້າອາດເຄື່ອນ ແລະ ປ່ຽນແປງ, ທຳມະຊາດຂອງຄົນໆໜຶ່ງຈະບໍ່ປ່ຽນ". ໃນເລື່ອງທີ່ມວນມະນຸດບໍ່ສາມາດເຂົ້າໃຈໄດ້, ທຸກສິ່ງທຸກຢ່າງໄດ້ຖືກເຮັດໃຫ້ຊັດເຈນແລ້ວ ແລະ ບໍ່ມີຫຍັງຖືກປົດບັງໄວ້ສຳລັບເຮົາ. ເຈົ້າອາດສາມາດປິດບັງບາງສິ່ງຈາກສາຍຕາຂອງຄົນຈຳນວນໜ້ອຍ ແລະ ເຖິງຂັ້ນໄດ້ຮັບຄວາມໄວ້ວາງໃຈຈາກຄົນຈຳນວນໜຶ່ງ, ແຕ່ກັບເຮົາມັນບໍ່ງ່າຍປານນັ້ນ. ໃນທີ່ສຸດ, ເຈົ້າກໍບໍ່ສາມາດໜີການພິພາກສາຂອງເຮົາໄດ້. ການຫຼຽວເບິ່ງຂອງມະນຸດຊາດມີຂີດຈຳກັດ, ແມ່ນແຕ່ບັນດາຜູ້ທີ່ສາມາດເຂົ້າໃຈບາງພາກສ່ວນຂອງສະພາບໃນປັດຈຸບັນກໍຖືກນັບເປັນຜູ້ທີ່ມີທັກສະ. ສຳລັບເຮົາ, ທຸກສິ່ງດຳເນີນໄປຢ່າງລາບລື້ນ ແລະ ບໍ່ມີສິ່ງໃດເຂົ້າມາຂວາງທາງເຮົາໄດ້ແມ່ນແຕ່ໜ້ອຍດຽວ, ຍ້ອນວ່າທຸກສິ່ງຢູ່ພາຍໃຕ້ການຄວບຄຸມ ແລະ ການຈັດແຈງຂອງເຮົາ. ມີໃຜກ້າບໍ່ອ່ອນນ້ອມຕໍ່ການຄວບຄຸມຂອງເຮົາ! ໃຜກ້າຂັດຂວາງການຄຸ້ມຄອງຂອງເຮົາ! ໃຜກ້າທີ່ຈະບໍ່ຊື່ສັດ

ຫຼື ບໍ່ອຸທິດຕໍ່ເຮົາ! ໃຜກ້າທີ່ຈະບອກສິ່ງທີ່ບໍ່ຈິງກັບເຮົາ, ແລ້ວເລົ່າເລື່ອງເທັດໃຫ້ເຮົາຟັງແທນ! ບໍ່ມີໃຜໃນພວກເຂົາທີ່ຈະໜີພົ້ນມືອັນໂກດຮ້າຍຂອງເຮົາໄດ້. ເຖິງແມ່ນວ່າຕອນນີ້ເຈົ້າຍອມຮັບຄວາມພ່າຍແພ້ແລ້ວ ແລະ ເຕັມໃຈທີ່ຈະຖືກຂ້ຽນຕີ ແລະ ເຂົ້າສູ່ຂຸມເລິກທີ່ສຸດ, ເຮົາກໍຈະບໍ່ປ່ອຍເຈົ້າໄປງ່າຍໆ. ເຮົາຈະດຶງເຈົ້າຂຶ້ນມາຈາກຂຸມເລິກເພື່ອວ່າເຈົ້າຈະຖືກລົງໂທດດ້ວຍຄວາມໂກດຮ້າຍຂອງເຮົາອີກຄັ້ງ (ກຽດຊັງຫຼາຍທີ່ສຸດ). ມີບ່ອນໃດໃຫ້ເຈົ້າແລ່ນໜີໄດ້ບໍ? ສິ່ງທີ່ເຮົາຊັງຫຼາຍທີ່ສຸດແມ່ນເມື່ອຄົນແຍກຄວາມເປັນມະນຸດທຳມະດາຂອງເຮົາຈາກຄວາມເປັນພຣະເຈົ້າອັນສົມບູນຂອງເຮົາ.

ໂຊກລາບແກ່ບັນດາຜູ້ທີ່ຊື່ສັດຕໍ່ເຮົາ; ນັ້ນກໍຄື, ໂຊກລາບແກ່ບັນດາຜູ້ທີ່ຍອມຮັບຢ່າງແທ້ຈິງວ່າເຮົາເປັນພຣະເຈົ້າຜູ້ທີ່ກວດສອບຫົວໃຈຂອງມະນຸດຢ່າງໃກ້ຊິດ. ເຮົາຈະເພີ່ມທະວີພອນຂອງເຈົ້າຢ່າງແນ່ນອນ, ອະນຸຍາດໃຫ້ເຈົ້າໄດ້ຮັບພອນປະເສີດໃນອານາຈັກຂອງເຮົາຕະຫຼອດໄປ. ນີ້ຍັງແມ່ນວິທີທີ່ມີປະສິດທິພາບທີ່ສຸດໃນການນຳເອົາຄວາມອັບອາຍມາສູ່ຊາຕານ. ແນວໃດກໍຕາມ, ຢ່າໃຈຮ້ອນ ຫຼື ວິຕົກກັງວົນຫຼາຍເກີນໄປ; ເຮົາໄດ້ກຳນົດເວລາສຳລັບທຸກສິ່ງທຸກຢ່າງແລ້ວ. ຖ້າເວລາທີ່ເຮົາກຳນົດໄວ້ນັ້ນຍັງບໍ່ທັນມາຮອດ, ເຖິງແມ່ນວ່າ ຖ້າມັນມາຮອດໄວພຽງໜຶ່ງວິນາທີ, ເຮົາກໍຈະບໍ່ປະຕິບັດ. ເຮົາປະຕິບັດຢ່າງແມ່ນຢຳ ແລະ ຕາມຈັງຫວະ; ເຮົາບໍ່ໄດ້ປະຕິບັດໂດຍບໍ່ມີເຫດຜົນ. ຈາກມຸມມອງຂອງມະນຸດ, ເຮົາບໍ່ໄດ້ກັງວົນໃຈແມ່ນແຕ່ໜ້ອຍເລີຍ; ເຮົາມີຄວາມໝັ້ນຄົງຄືກັບພູເຂົາໄຕ, ແຕ່ເຈົ້າບໍ່ຮູ້ບໍວ່າເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ? ຢ່າໃຈຮ້ອນເກີນໄປ; ທັງໝົດຢູ່ໃນກຳມືຂອງເຮົາ. ທຸກສິ່ງທຸກຢ່າງໄດ້ຖືກກະກຽມໄວ້ດົນແລ້ວ ແລະ ບໍ່ມີຫຍັງສາມາດລໍຖ້າທີ່ຈະຮັບໃຊ້ເຮົາ. ຈັກກະວານໂລກທັງມວນປາກົດວ່າ ຈາກພາຍນອກແມ່ນຢູ່ໃນຄວາມສັບສົນວຸ້ນວາຍ, ແຕ່ໃນມຸມມອງຂອງເຮົາ, ທຸກສິ່ງເປັນລະບຽບຮຽບຮ້ອຍດີ. ສິ່ງທີ່ເຮົາໄດ້ກະກຽມໄວ້ໃຫ້ພວກເຈົ້າແມ່ນເພື່ອໃຫ້ພວກເຈົ້າມີຄວາມສຸກເທົ່ານັ້ນ. ເຈົ້າຮັບຮູ້ສິ່ງນີ້ບໍ? ຢ່າເອົາຕົວເຈົ້າເອງສອດເຂົ້າໄປໃນການຄຸ້ມຄອງຂອງເຮົາ. ເຮົາຈະເຮັດໃຫ້ທຸກຄົນ ແລະ ທຸກຊາດເຫັນຄວາມມີລິດທານຸພາບສູງສຸດຂອງເຮົາຈາກການກະທຳຂອງເຮົາ, ເຮົາຈະໃຫ້ພວກເຂົາຍົກຍ້ອງ ແລະ ສັນລະເສີນນາມອັນບໍລິສຸດຂອງເຮົາສຳລັບການກະທຳອັນໜ້າອັດສະຈັນຂອງເຮົາ. ນີ້ກໍຍ້ອນວ່າ, ດັ່ງທີ່ເຮົາໄດ້ກ່າວໄວ້, ບໍ່ມີສິ່ງໃດທີ່ເຮົາເຮັດປາສະຈາກພື້ນຖານ; ກົງກັນຂ້າມ, ທຸກສິ່ງເຕັມໄປດ້ວຍສະຕິປັນຍາຂອງເຮົາ ແລະ ອຳນາດຂອງເຮົາ, ດ້ວຍຄວາມຊອບທຳ ແລະ ເດຊານຸພາບຂອງເຮົາ, ຍິ່ງໄປກວ່ານັ້ນແມ່ນ ດ້ວຍຄວາມພິໂລດຂອງເຮົາ.

ບັນດາຜູ້ທີ່ຕື່ນຕົວທັນທີເມື່ອໄດ້ຍິນພຣະທຳຂອງເຮົາຈະໄດ້ຮັບພອນຂອງເຮົາຢ່າງແນ່ນອນ ແລະ ຈະໄດ້ຮັບການປົກປ້ອງ ແລະ ການດູແລຂອງເຮົາຢ່າງແນ່ນອນ. ພວກເຂົາຈະບໍ່ປະສົບກັບຄວາມທໍລະມານຂອງການຂ້ຽນຕີ; ກົງກັນຂ້າມ, ພວກເຂົາຈະໄດ້ຮັບຄວາມສຸກຂອງຄອບຄົວ. ພວກເຈົ້າຮູ້ເລື່ອງນີ້ບໍ່? ຄວາມທຸກທໍລະມານນັ້ນນິລັນດອນ ແຕ່ຄວາມສຸກນັ້ນນິລັນດອນຍິ່ງກວ່າ; ທັງສອງສິ່ງນີ້ຈະຖືກປະສົບຕັ້ງແຕ່ນີ້ໄປ. ບໍ່ວ່າເຈົ້າທົນທຸກ ຫຼື ປະສົບກັບຄວາມສຸກກໍຕາມ ນັ້ນຂຶ້ນຢູ່ກັບວ່າເຈົ້າມີທັດສະນະຄະຕິແບບໃດເມື່ອເຈົ້າຍອມຮັບບາບຂອງເຈົ້າ. ສຳລັບເຈົ້າຄືໜຶ່ງໃນຜູ້ທີ່ຖືກກຳນົດໄວ້ ຫຼື ຜູ້ທີ່ຖືກເລືອກຂອງເຮົາ ຫຼື ບໍ່ນັ້ນ, ເຈົ້າຄວນໝັ້ນໃຈກັບເລື່ອງນີ້ໃນແງ່ມຸມຂອງສິ່ງທີ່ເຈົ້າເວົ້າ. ເຈົ້າສາມາດ

ຫຼອກຄົນໄດ້, ແຕ່ເຈົ້າບໍ່ສາມາດຫຼອກເຮົາໄດ້. ບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ເລືອກໄວ້ຈະໄດ້ຮັບການອວຍພອນຢ່າງຍິ່ງໃຫຍ່ແຕ່ນີ້ເປັນຕົ້ນໄປ; ສ່ວນບັນດາຜູ້ທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ ແລະ ເລືອກໄວ້, ເຮົາຈະຂ້ຽນຕີພວກເຂົາຢ່າງໜັກນັບແຕ່ນີ້ເປັນຕົ້ນໄປ. ນີ້ຈະເປັນຂໍ້ພິສູດຂອງເຮົາຕໍ່ພວກເຈົ້າ. ບັນດາຜູ້ທີ່ໄດ້ຮັບພອນໃນຕອນນີ້ແມ່ນຜູ້ທີ່ເຮົາຮັກຢ່າງບໍ່ຕ້ອງສົງໄສ; ສ່ວນບັນດາຜູ້ທີ່ຖືກຂ້ຽນຕີ, ເຫັນໄດ້ຢ່າງຊັດເຈນວ່າພວກເຂົາບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າ ແລະ ຖືກເລືອກໄວ້ໂດຍເຮົາ. ພວກເຈົ້າຄວນຊັດເຈນໃນເລື່ອງນີ້! ໝາຍຄວາມວ່າ, ຖ້າສິ່ງທີ່ເຈົ້າໄດ້ຮັບຕອນນີ້ຖືກເຮົາຈັດການ ແລະ ຖ້າເຈົ້າໄດ້ຮັບພຣະທຳແຫ່ງການພິພາກສາອັນໂຫດຮ້າຍຂອງເຮົາ, ເຈົ້າແມ່ນຖືກເຮົາກຽດຊັງ ແລະ ລັງກຽດຢູ່ໃນໃຈເຮົາ ແລະ ເຈົ້າຈະເປັນໜຶ່ງໃນຜູ້ທີ່ເຮົາປະຖິ້ມ. ຖ້າເຈົ້າໄດ້ຮັບການປອບໃຈຂອງເຮົາ ແລະ ການສະໜອງຊີວິດຂອງເຮົາ, ເຈົ້າກໍຢູ່ໃນການຄອບຄອງຂອງເຮົາ; ເຈົ້າແມ່ນໜຶ່ງໃນຜູ້ທີ່ເຮົາຮັກ. ເຈົ້າບໍ່ສາມາດເບິ່ງສິ່ງນີ້ຕາມລັກສະນະພາຍນອກຂອງເຮົາໄດ້. ຢ່າໄດ້ເສຍສະຕິກັບເລື່ອງນີ້!

ພຣະທຳຂອງເຮົາເວົ້າເຖິງສະພາບຕົວຈິງຂອງທຸກຄົນ. ພວກເຈົ້າເຊື່ອວ່າເຮົາພຽງເວົ້າໄປທົ່ວທິບ ຫຼື ເຮົາພຽງເວົ້າຫຍັງກໍຕາມທີ່ເຮົາຮູ້ສຶກຢາກເວົ້າບໍ? ແນ່ນອນວ່າບໍ່! ສະຕິປັນຍາຂອງເຮົານັ້ນຖືກເຊື່ອງຢູ່ໃນທຸກຂໍ້ພຣະທຳຂອງເຮົາ. ເຈົ້າຄວນເອົາພຣະທຳຂອງເຮົາເປັນຄວາມຈິງ. ໃນອີກບໍ່ດົນ, ຄົນຕ່າງຊາດຜູ້ທີ່ສະແຫວງຫາເສັ້ນທາງທີ່ແທ້ຈິງກໍຈະເຂົ້າມາ. ເມື່ອສິ່ງນັ້ນເກີດຂຶ້ນ, ພວກເຈົ້າຈະຕົກໃຈຈົນເວົ້າບໍ່ອອກ ແລະ ທຸກສິ່ງຈະສຳເລັດລົງໂດຍບໍ່ມີຄວາມຫຍຸ້ງຍາກໃດໆ. ພວກເຈົ້າຮູ້ບໍ່ວ່າເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ? ເມື່ອໄດ້ຍິນພຣະທຳເຫຼົ່ານີ້ຂອງເຮົາ, ພວກເຈົ້າເຊື່ອມັນຢ່າງແທ້ຈິງແມ່ນບໍ່? ເຮົາບໍ່ເຮັດຜິດພາດ, ແຮງໄກທີ່ຈະເວົ້າໃນສິ່ງທີ່ບໍ່ເປັນຈິງ. ເຈົ້າຮູ້ເລື່ອງນີ້ບໍ່? ເພາະສະນັ້ນ, ເຮົາໄດ້ເນັ້ນຊໍ້າແລ້ວຊໍ້າອີກວ່າພວກເຈົ້າຕ້ອງຍອມຮັບການເຝິກອົບຮົມຂອງເຮົາໂດຍໄວເພື່ອນຳພາ ແລະ ລ້ຽງດູພວກເຂົາ. ພວກເຈົ້າຮູ້ເລື່ອງນີ້ບໍ? ຜ່ານພວກເຈົ້າ ເຮົາຈະເຮັດໃຫ້ພວກເຂົາສົມບູນ. ສຳຄັນໄປກວ່ານັ້ນ, ຜ່ານພວກເຈົ້າ ເຮົາຈະສະແດງສັນຍານ ແລະ ສິ່ງມະຫັດສະຈັນອັນຍິ່ງໃຫຍ່ຂອງເຮົາ; ນັ້ນກໍຄື, ທ່າມກາງບັນດາຜູ້ທີ່ຖືກມະນຸດຊາດດູຖູກ, ເຮົາໄດ້ເລືອກເອົາຄົນກຸ່ມໜຶ່ງເພື່ອປະຈັກຕໍ່ເຮົາ, ເພື່ອສັນລະເສີນນາມຂອງເຮົາ, ເພື່ອຮັບຜິດຊອບສິ່ງຕ່າງໃຫ້ເຮົາ ແລະ ເພື່ອຂຶ້ນຄອງເປັນກະສັດຮ່ວມກັບເຮົາ. ສະນັ້ນ, ການເຝິກອົບຮົມປັດຈຸບັນຂອງເຮົາຕໍ່ພວກເຈົ້າແມ່ນການຄຸ້ມຄອງທີ່ຍິ່ງໃຫຍ່ທີ່ສຸດຂອງໂລກ; ນີ້ແມ່ນສິ່ງມະຫັດສະຈັນທີ່ມະນຸດບໍ່ສາມາດປະຕິບັດໄດ້. ດ້ວຍວິທີການເຮັດໃຫ້ພວກເຈົ້າສົມບູນ, ເຮົາຄວນໂຍນຊາຕານລົງສູ່ທະເລສາບແຫ່ງໄຟ ແລະ ມາດ ແລະ ຂຸມເລິກທີ່ສຸດ, ໂຍນມັງກອນແດງຜູ້ຍິ່ງໃຫຍ່ໃຫ້ຕາຍຢ່າງສິ້ນເຊີງ ບໍ່ໃຫ້ລຸກຂຶ້ນມາອີກ. ເພາະສະນັ້ນ, ບັນດາຜູ້ທີ່ຖືກໂຍນລົງຂຸມເລິກແມ່ນລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່. ເຮົາກຽດຊັງພວກເຂົາທີ່ສຸດ. ນີ້ແມ່ນສິ່ງທີ່ເຮົານຳມາ. ພວກເຈົ້າບໍ່ເຫັນບໍ? ທຸກຄົນທີ່ບໍ່ຊື່ສັດ ແລະ ທຸກຄົນທີ່ນຳໃຊ້ການຄົດໂກງ ແລະ ການຫຼອກລວງໄດ້ຖືກເປີດໂປງແລ້ວ. ຄົນທີ່ອວດດີ, ຈອງຫອງ, ອວດອົ່ງທະນົງຕົວ ແລະ ບໍ່ສຸພາບແມ່ນລູກຫຼານຂອງເທວະທູດ ແລະ ພວກເຂົາຄືຕົວແທນຂອງຊາຕານ; ພວກເຂົາທັງໝົດເປັນສັດຕູສາບານຂອງເຮົາ, ຄູ່ອາຄາດຂອງເຮົາ. ເຮົາຕ້ອງລົງໂທດພວກເຂົາເທື່ອລະຄົນເພື່ອລົບລ້າງຄວາມກຽດຊັງໃນໃຈເຮົາ. ເຮົາ

ຈະເຮັດດັ່ງນີ້ກັບພວກເຂົາແຕ່ລະຄົນ, ສຸດທ້າຍກໍຈະແກ້ໄຂພວກເຂົາທຸກຄົນ.

ບັດນີ້, ແທ້ຈິງແລ້ວ ແມ່ນຫຍັງຄືທະເລສາບແຫ່ງໄຟ ແລະ ມາດ ແລະ ຂຸມເລິກທີ່ສຸດ? ໃນຈິນຕະນາການຂອງມະນຸດ, ທະເລສາບແຫ່ງໄຟ ແລະ ມາດແມ່ນສິ່ງທີ່ເປັນວັດຖຸ, ແຕ່ມະນຸດບໍ່ຮູ້ວ່ານີ້ແມ່ນຄຳອະທິບາຍທີ່ຜິດພາດຢ່າງຍິ່ງ. ເຖິງຢ່າງໃດກໍຕາມ, ມັນຍັງຄົງຄອບຄອງບາງຕຳແໜ່ງໃນຈິດໃຈຄົນ. ທະເລສາບແຫ່ງໄຟ ແລະ ມາດແມ່ນມືຂອງເຮົາທີ່ຂ້ຽນຕີມວນມະນຸດ; ໃຜກໍຕາມທີ່ຖືກໂຍນລົງສູ່ທະເລສາບແຫ່ງໄຟ ແລະ ມາດແມ່ນໄດ້ຖືກສັງຫານດ້ວຍມືຂອງເຮົາ. ວິນຍານ, ຈິດວິນຍານ ແລະ ຮ່າງກາຍຂອງຄົນເຫຼົ່ານີ້ທົນທຸກທໍລະມານຕະຫຼອດໄປ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາເມື່ອເຮົາເວົ້າວ່າທຸກສິ່ງຢູ່ໃນກຳມືຂອງເຮົາ. ແລ້ວຂຸມເລິກທີ່ສຸດນັ້ນໝາຍເຖິງຫຍັງ? ມະນຸດຄິດວ່າມັນເປັນເຫວຂະໜາດໃຫຍ່ທີ່ເລິກທີ່ສຸດ ແລະ ຢັ່ງບໍ່ເຖິງ. ຂຸມເລິກທີ່ສຸດ ແທ້ຈິງກໍຄືອິດທິພົນຂອງຊາຕານ. ຖ້າຄົນໆໜຶ່ງຕົກຢູ່ໃນມືຂອງຊາຕານ, ຄົນນັ້ນກໍຈະຢູ່ໃນຂຸມເລິກດັ່ງກ່າວ; ເຖິງແມ່ນວ່າພວກເຂົາຈະມີປີກ ພວກເຂົາກໍບໍ່ສາມາດບິນອອກໄດ້. ນີ້ຄືເຫດຜົນທີ່ວ່າ ເປັນຫຍັງມັນຈຶ່ງຖືກເອີ້ນວ່າຂຸມເລິກທີ່ສຸດ. ຄົນເຫຼົ່ານັ້ນທຸກຄົນຈະຖືກຂ້ຽນຕີໄປຕະຫຼອດການ; ນີ້ແມ່ນຫົນທາງທີ່ເຮົາໄດ້ຈັດແຈງໄວ້ແລ້ວ.

# ບົດທີ 81

ຍຸກສະໄໝເກົ່ານີ້ຊ່າງຊົ່ວຮ້າຍ ແລະ ໄຮ້ສິນທຳ! ເຮົາຈະກືນກິນເຈົ້າເສຍ! ພູຊີໂອນເອີຍ! ຈົ່ງລຸກຂຶ້ນມາຕ້ອນຮັບເຮົາ! ເພື່ອຄວາມສຳເລັດຂອງແຜນການຄຸ້ມຄອງຂອງເຮົາ, ເພື່ອຄວາມສຳເລັດຢ່າງສົມບູນຂອງພາລະກິດທີ່ຍິ່ງໃຫຍ່ຂອງເຮົາ, ຜູ້ໃດກ້າບໍ່ລຸກຂຶ້ນ ແລະ ຮ້ອງໂຮ! ຜູ້ໃດກ້າບໍ່ລຸກຂຶ້ນ ແລະ ໂດດເຕັ້ນດ້ວຍຄວາມຍິນດີຢ່າງບໍ່ສິ້ນສຸດ? ພວກເຂົາຈະພົບຄວາມຕາຍຂອງພວກເຂົາໃນມືຂອງເຮົາ! ເຮົາປະຕິບັດຄວາມຊອບທຳຕໍ່ທຸກຄົນ ໂດຍບໍ່ມີຄວາມເມດຕາ ຫຼື ຄວາມຮັກກະລຸນາແມ່ນແຕ່ໜ້ອຍດຽວ ແລະ ເຮົາກໍກະທຳຢ່າງເປັນກາງຫຼາຍທີ່ສຸດ. ຄົນທັງຫຼາຍເອີຍ! ຈົ່ງລຸກຂຶ້ນສັນລະເສີນ ແລະ ມອບສະຫງ່າລາສີໃຫ້ແກ່ເຮົາ! ສະຫງ່າລາສີທີ່ບໍ່ສິ້ນສຸດທັງໝົດຈາກນິລັນດອນສູ່ນິລັນດອນດຳລົງຢູ່ກໍຍ້ອນເຮົາ ແລະ ຖືກສ້າງຕັ້ງຂຶ້ນໂດຍເຮົາ. ໃຜຈະກ້າເອົາສະຫງ່າລາສີໃຫ້ແກ່ຕົວເອງ? ໃຜຈະກ້າປະຕິບັດຕໍ່ສະຫງ່າລາສີຂອງເຮົາດັ່ງສິ່ງຂອງທາງວັດຖຸ? ພວກເຂົາຈະຖືກຂ້າໂດຍມືຂອງເຮົາ! ໂອ ມະນຸດຜູ້ໂຫດຮ້າຍເອີຍ! ເຮົາສ້າງພວກເຈົ້າ ແລະ ສະໜອງໃຫ້ແກ່ພວກເຈົ້າ ແລະ ເຮົາໄດ້ນຳພາພວກເຈົ້າຈົນມາຮອດມື້ນີ້, ແຕ່ພວກເຈົ້າບໍ່ຮູ້ກ່ຽວກັບເຮົາແມ່ນແຕ່ເລັກນ້ອຍທີ່ສຸດ ແລະ ພວກເຈົ້າບໍ່ໄດ້ຮັກເຮົາເລີຍ. ແລ້ວເຮົາຈະສາມາດສະແດງຄວາມເມດຕາຕໍ່ພວກເຈົ້າອີກໄດ້ແນວໃດ? ເຮົາຈະສາມາດຊ່ວຍພວກເຈົ້າໃຫ້ລອດພົ້ນໄດ້ແນວໃດ? ເຮົາສາມາດປະຕິບັດກັບພວກເຈົ້າດ້ວຍຄວາມໂກດຮ້າຍຂອງເຮົາເທົ່ານັ້ນ! ເຮົາຈະຕອບແທນພວກເຈົ້າດ້ວຍການທຳລາຍ ແລະ ດ້ວຍການຂ້ຽນຕີນິລັນດອນ. ນີ້ແມ່ນຄວາມຊອບທຳ; ມັນສາມາດເປັນໄດ້ແຕ່ວິທີນີ້ເທົ່ານັ້ນ.

ອານາຈັກຂອງເຮົາແໜ້ນໜາ ແລະ ໝັ້ນຄົງ; ມັນຈະບໍ່ມີວັນພັງທະລາຍ. ມັນຈະດຳລົງຢູ່ຕະຫຼອດໄປເປັນນິດ! ລູກຊາຍຂອງເຮົາ, ລູກຊາຍກົກຂອງເຮົາ ແລະ ຄົນຂອງເຮົາຈະຊື່ນຊົມພອນກັບເຮົາຕະລອດໄປເປັນນິດ. ບັນດາຜູ້ທີ່ບໍ່ເຂົ້າໃຈເລື່ອງຝ່າຍວິນຍານ ແລະ ຜູ້ທີ່ບໍ່ໄດ້ຮັບການເປີດເຜີຍຈາກພຣະວິນຍານບໍລິສຸດຈະຖືກຕັດອອກຈາກອານາຈັກຂອງເຮົາບໍ່ໄວກໍຊ້າ. ພວກເຂົາຈະບໍ່ຈາກໄປດ້ວຍຄວາມສະໝັກໃຈຂອງພວກເຂົາເອງ ແຕ່ຈະຖືກບັງຄັບໃຫ້ອອກໂດຍກົດເກນແຫ່ງທ່ອນເຫຼັກຂອງເຮົາ ແລະ ໂດຍຄວາມສະຫງ່າຜ່າເຜີຍຂອງເຮົາ; ຍິ່ງໄປກວ່ານັ້ນ, ພວກເຂົາຈະຖືກຕີນຂອງເຮົາເຕະອອກເສຍ. ບັນດາຜູ້ທີ່ຖືກຄອບງຳເປັນຊ່ວງເວລາສັ້ນໆໂດຍວິນຍານຊົ່ວຮ້າຍ (ໝາຍເຖິງຕັ້ງແຕ່ເກີດ) ລ້ວນແລ້ວແຕ່ຈະຖືກເປີດໂປງໃນຕອນນີ້. ເຮົາຈະເຕະເຈົ້າອອກເສຍ! ເຈົ້າຍັງຈື່ສິ່ງທີ່ເຮົາກ່າວໄດ້ບໍ? ເຮົາເຊິ່ງເປັນພຣະເຈົ້າຜູ້ບໍລິສຸດ ແລະ ບໍ່ມີມົນທິນ ໄດ້ອາໄສຢູ່ໃນວິຫານທີ່ເປິເປື້ອນ ແລະ ສົກກະປົກ. ບັນດາຜູ້ທີ່ຖືກວິນຍານຊົ່ວຮ້າຍຄອບງຳຮູ້ສິ່ງນີ້ດ້ວຍຕົວເອງ ແລະ ເຮົາບໍ່ຈຳເປັນຕ້ອງຊີ້ແຈງ. ເຮົາບໍ່ໄດ້ກຳນົດເຈົ້າໄວ້ລ່ວງໜ້າ! ເຈົ້າແມ່ນຊາຕານເຖົ້າ, ແຕ່ເຈົ້າຕ້ອງການທີ່ຈະແຊກຊຶມໃນອານາຈັກຂອງເຮົາ! ແນ່ນອນວ່າບໍ່! ເຮົາກຳລັງບອກເຈົ້າຢູ່! ມື້ນີ້ເຮົາຈະເຮັດໃຫ້ມັນຊັດເຈນຫຼາຍສຳລັບເຈົ້າ: ຜູ້ທີ່ເຮົາເລືອກໃນຊ່ວງເວລາແຫ່ງການຊົງສ້າງມວນມະນຸດຊາດ, ເຮົາໄດ້ເຮັດໃຫ້ພວກເຂົາເຕັມໄປດ້ວຍຄຸນນະພາບຂອງເຮົາ ແລະ ອຸປະນິໄສຂອງເຮົາ; ເພາະສະນັ້ນ, ປັດຈຸບັນນີ້ ພວກເຂົາຈຶ່ງຈົ່ງຮັກພັກດີກັບເຮົາ

ພຽງຜູ້ດຽວ, ພວກເຂົາສາມາດແບກພາລະສຳລັບຄຣິສຕະຈັກໄດ້ ແລະ ພວກເຂົາເຕັມໃຈທີ່ຈະເສຍສະຫຼະຕົວເອງໃຫ້ແກ່ເຮົາ ແລະ ມອບຖວາຍການເປັນຢູ່ທັງໝົດຂອງຕົນໃຫ້ແກ່ເຮົາ. ເພາະສະນັ້ນ ຜູ້ທີ່ເຮົາບໍ່ໄດ້ເລືອກຈຶ່ງຖືກຊາຕານເຮັດໃຫ້ເສື່ອມຊາມຈົນເຖິງລະດັບໃດໜຶ່ງ ແລະ ພວກເຂົາບໍ່ມີຄຸນນະພາບຂອງເຮົາ ແລະ ບໍ່ມີອຸປະນິໄສຂອງເຮົາ. ພວກເຈົ້າຄິດວ່າພຣະທຳຂອງເຮົາຂັດແຍ້ງກັນ, ແຕ່ຄຳວ່າ "ເຈົ້າໄດ້ຖືກເຮົາກຳນົດໄວ້ລ່ວງໜ້າ ແລະ ເລືອກ, ແຕ່ພວກເຈົ້າຮັບຜົນຈາກການກະທຳຂອງເຈົ້າ" ລ້ວນແລ້ວແຕ່ໝາຍເຖິງຊາຕານ. ບັດນີ້ ເຮົາຈະອະທິບາຍຈຸດໜຶ່ງ: ປັດຈຸບັນນີ້, ຜູ້ທີ່ສາມາດລຸກຂຶ້ນ ແລະ ຮັບສິດອຳນາດເໜືອຄຣິສຕະຈັກ, ລ້ຽງດູຄຣິສຕະຈັກ, ຄຳນຶງເຖິງພາລະຂອງເຮົາ ແລະ ປະຕິບັດໜ້າທີ່ພິເສດ, ບໍ່ມີແມ່ນແຕ່ຄົນດຽວໃນຄົນເຫຼົ່ານີ້ທີ່ຮັບໃຊ້ພຣະຄຣິດ; ພວກເຂົາທຸກຄົນແມ່ນຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ໄດ້ເລືອກ. ເຮົາບອກສິ່ງນີ້ກັບພວກເຈົ້າ ເພື່ອວ່າພວກເຈົ້າຈະບໍ່ກັງວົນຫຼາຍເກີນໄປ ແລະ ຖ່ວງດຶງຄວາມກ້າວໜ້າໃນຊີວິດຂອງເຈົ້າ. ມີຈັກຄົນທີ່ສາມາດໄດ້ຮັບສະຖານະຂອງລູກຊາຍກົກໄດ້? ເປັນໄປໄດ້ບໍວ່ານີ້ເປັນສິ່ງທີ່ງ່າຍຄືກັບການມອບໃບປະລິນຍາ? ເປັນໄປບໍ່ໄດ້! ຫາກບໍ່ແມ່ນຍ້ອນການທີ່ເຮົາເຮັດໃຫ້ພວກເຈົ້າສົມບູນ, ພວກເຈົ້າກໍຄົງຈະຖືກຊາຕານເຮັດໃຫ້ເສື່ອມຊາມຈົນເຖິງລະດັບໃດໜຶ່ງມາດົນແລ້ວ. ນີ້ແມ່ນເຫດຜົນວ່າເປັນຫຍັງເຮົາຈຶ່ງເນັ້ນຊໍ້າໆວ່າເຮົາຈະເບິ່ງແຍງ ແລະ ປົກປ້ອງຜູ້ທີ່ຈິງຮັກພັກດີກັບເຮົາຢູ່ສະເໝີ ແລະ ປ້ອງກັນພວກເຂົາຈາກອັນຕະລາຍ ແລະ ຄວາມທຸກທໍລະມານ. ຜູ້ທີ່ເຮົາບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າແມ່ນຜູ້ທີ່ຖືກວິນຍານຊົ່ວຮ້າຍຄອບງຳ; ພວກເຂົາແມ່ນຜູ້ທີ່ໄຮ້ຄວາມຮູ້ສຶກ, ໂງ່ຈ້າ ແລະ ເຕີບໃຫຍ່ທາງວິນຍານບໍ່ໄດ້ເຕັມທີ່ ແລະ ເປັນຜູ້ທີ່ບໍ່ສາມາດລ້ຽງດູຄຣິສຕະຈັກໄດ້ (ໝາຍເຖິງຜູ້ທີ່ມີຄວາມກະຕືລືລົ້ນ ແຕ່ບໍ່ມີນິມິດທີ່ຊັດເຈນ). ເຈົ້າຄວນຖືກລົບອອກຈາກສາຍຕາຂອງເຮົາໂດຍໄວ ແລະ ຍິ່ງໄວເທົ່າໃດກໍຍິ່ງດີເທົ່ານັ້ນ, ຢ້ານວ່າເຮົາຈະລັງກຽດ ແລະ ໃຈຮ້າຍເມື່ອເຫັນເຈົ້າ. ຖ້າເຈົ້າໜີໄປໂດຍໄວ, ເຈົ້າຈະໄດ້ຮັບການຂ້ຽນຕີໜ້ອຍລົງ, ແຕ່ຍິ່ງເຈົ້າໃຊ້ເວລາດົນປານໃດ ການຂ້ຽນຕີຍິ່ງຮຸນແຮງຫຼາຍຂຶ້ນເທົ່ານັ້ນ. ເຈົ້າເຂົ້າໃຈບໍ? ຢຸດການກະທຳຢ່າງໄຮ້ຢາງອາຍເສຍ! ເຈົ້າຊ່າງເສເພ ແລະ ໃຈແຕກ, ໄຮ້ຄວາມຄິດ ແລະ ປະໝາດ ແລະ ບໍ່ຮູ້ດ້ວຍຊໍ້າວ່າເຈົ້າແມ່ນຂີ້ເຫຍື້ອແບບໃດ! ເຈົ້າຕາບອດ!

ຜູ້ທີ່ມີອຳນາດໃນອານາຈັກຂອງເຮົາລ້ວນແລ້ວແຕ່ຖືກເຮົາເລືອກຢ່າງລະມັດລະວັງ ແລະ ໄດ້ຜ່ານການທົດສອບຊໍ້າແລ້ວຊໍ້າອີກ; ບໍ່ມີໃຜສາມາດເອົາຊະນະພວກເຂົາໄດ້. ເຮົາໄດ້ປະທານກຳລັງໃຫ້ພວກເຂົາ, ສະນັ້ນ ພວກເຂົາຈະບໍ່ມີວັນລົ້ມ ຫຼື ຫຼົງທາງ. ພວກເຂົາໄດ້ຮັບການຮອງຮັບຈາກເຮົາ. ນັບແຕ່ມື້ນີ້ໄປ, ຄົນໜ້າຊື່ໃຈຄົດຈະສະແດງທາດແທ້ຂອງພວກເຂົາອອກມາ. ພວກເຂົາສາມາດເຮັດສິ່ງທີ່ໜ້າອັບອາຍໄດ້ທຸກປະເພດ, ແຕ່ໃນທີ່ສຸດ ພວກເຂົາກໍຈະບໍ່ສາມາດໜີພົ້ນມືຂອງເຮົາທີ່ຂ້ຽນຕີ ແລະ ເຜົາໄໝ້ຊາຕານໄດ້. ວິຫານຂອງເຮົາຈະບໍລິສຸດ ແລະ ບໍ່ມີມົນທິນ. ມັນທັງໝົດໄດ້ເປັນປະຈັກພະຍານໃຫ້ແກ່ເຮົາ, ການສະແດງອອກເຖິງເຮົາ ແລະ ສະຫງ່າລາສີໃຫ້ແກ່ນາມຂອງເຮົາ. ວິຫານຂອງເຮົາແມ່ນບ່ອນຢູ່ຊົ່ວນິລັນດອນຂອງເຮົາ ແລະ ເປັນເປົ້າໝາຍແຫ່ງຄວາມຮັກນິລັນດອນຂອງເຮົາ; ເຮົາມັກຈະກອດມັນດ້ວຍມືແຫ່ງຄວາມຮັກ, ນຳເອົາການປອບໃຈມາສູ່ມັນດ້ວຍພາສາແຫ່ງຄວາມຮັກ, ດູແລມັນ

ດ້ວຍສາຍຕາແຫ່ງຄວາມຮັກ ແລະ ໂອບກອດມັນໄວ້ໃນອ້ອມແຂນແຫ່ງຄວາມຮັກ ເພື່ອວ່າມັນຈະບໍ່ຕິດກັບດັກຂອງຄົນຊົ່ວ ແລະ ບໍ່ຖືກຊາຕານລໍ້ລວງ. ປັດຈຸບັນນີ້, ຜູ້ທີ່ໃຫ້ບໍລິການແກ່ເຮົາ ແຕ່ບໍ່ໄດ້ຖືກຊ່ວຍໃຫ້ລອດພົ້ນ ແມ່ນຈະຖືກເຮົາໃຊ້ເປັນຄັ້ງສຸດທ້າຍ. ເປັນຫຍັງເຮົາຈຶ່ງຝ້າວໂຍນສິ່ງເຫຼົ່ານີ້ອອກຈາກອານາຈັກຂອງເຮົາ? ເປັນຫຍັງເຮົາຈຶ່ງຂັບໄລ່ພວກເຂົາໜີຈາກສາຍຕາເຮົາ? ເຮົາຊັງພວກເຂົາຈົນເຂົ້າກະດູກດຳ! ເປັນຫຍັງເຮົາຈຶ່ງບໍ່ຊ່ວຍພວກເຂົາໃຫ້ລອດພົ້ນ? ເປັນຫຍັງເຮົາຈຶ່ງກຽດຊັງພວກເຂົາເຊັ່ນນີ້? ເປັນຫຍັງເຮົາຕ້ອງຕີພວກເຂົາໃຫ້ຕາຍ? ເປັນຫຍັງເຮົາຕ້ອງທຳລາຍພວກເຂົາ? (ບໍ່ມີແມ່ນແຕ່ສ່ວນດຽວຂອງພວກເຂົາທີ່ສາມາດຢູ່ໃນສາຍຕາເຮົາໄດ້ ລວມເຖິງຂີ້ເທົ່າຂອງພວກເຂົາດ້ວຍ). ເປັນຫຍັງ? ແມ່ນແຕ່ມັງກອນແດງຜູ້ຍິ່ງໃຫຍ່, ງູດຶກດຳບັນ ແລະ ຊາຕານເຖົ້າກໍສະແຫວງຫາການສະໜັບສະໜູນທີ່ບໍ່ໄດ້ຮັບໃນອານາຈັກຂອງເຮົາ! ຢ່າເພີ້ຝັນອີກຕໍ່ໄປ! ພວກເຂົາທຸກຄົນຈະກັບຄືນສູ່ຄວາມວ່າງເປົ່າ ແລະ ກາຍເປັນຂີ້ເທົ່າ!

ເຮົາຈະທຳລາຍຍຸກນີ້ເສຍ, ປ່ຽນມັນໃຫ້ເປັນອານາຈັກຂອງເຮົາ ແລະ ດຳລົງຊີວິດຢູ່ ແລະ ມີຄວາມສຸກຕະຫຼອດໄປກັບຄົນທີ່ເຮົາຮັກ. ສິ່ງທີ່ບໍ່ສະອາດເຫຼົ່ານັ້ນບໍ່ຄວນຖືວ່າພວກເຂົາຍັງສາມາດຢູ່ໃນອານາຈັກຂອງເຮົາໄດ້. ເຈົ້າຄິດວ່າເຈົ້າສາມາດຫາປາໃນນໍ້າຂຸ່ນໄດ້ບໍ? ລືມຄວາມເພີ້ຝັນແບບນັ້ນເສຍ! ເຈົ້າບໍ່ຮູ້ວ່າຕາຂອງເຮົາກຳລັງເບິ່ງທຸກສິ່ງຢູ່! ເຈົ້າບໍ່ຮູ້ວ່າທຸກສິ່ງໄດ້ຖືກຈັດແຈງໂດຍມືຂອງເຮົາ! ຢ່າຄິດວ່າເຈົ້າເປັນທີ່ເຄົາລົບນັບຖືຢ່າງສູງສົ່ງຫຼາຍ! ພວກເຈົ້າແຕ່ລະຄົນຕ້ອງມີຕຳແໜ່ງທີ່ເໝາະສົມຂອງຕົນ. ຢ່າທຳທ່າເປັນຄົນຖ່ອມຕົນ (ເຮົາກຳລັງໝາຍເຖິງບັນດາຜູ້ທີ່ໄດ້ຮັບພອນ) ຫຼື ຕົວສັ່ນ ແລະ ຢ້ານກົວ (ເຮົາກຳລັງໝາຍເຖິງບັນດາຜູ້ທີ່ປະສົບຄວາມໂຊກຮ້າຍ). ຕອນນີ້ ທຸກຄົນຄວນຮູ້ໃນຫົວໃຈຂອງພວກເຂົາດ້ວຍຕົນເອງ. ເຖິງແມ່ນວ່າເຮົາບໍ່ໄດ້ເອີ້ນຊື່ຂອງເຈົ້າກໍຕາມ, ເຈົ້າຍັງຄວນຮູ້ສຶກໝັ້ນໃຈຢູ່ເພາະເຮົາໄດ້ແນພຣະທຳຂອງເຮົາໃສ່ທຸກຄົນ. ບໍ່ວ່າເຈົ້າຈະເປັນຄົນທີ່ເຮົາເລືອກ ຫຼື ບໍ່ກໍຕາມ, ພຣະທຳຂອງເຮົາກໍແນໄປທີ່ສະພາບການໃນປັດຈຸບັນຂອງພວກເຈົ້າທຸກຄົນ. ນັ້ນໝາຍຄວາມວ່າ ຖ້າພວກເຈົ້າຢູ່ໃນບັນດາຜູ້ທີ່ເຮົາເລືອກ ເຮົາກໍກ່າວເຖິງສະພາບການຂອງບັນດາຜູ້ທີ່ເຮົາໄດ້ເລືອກ ໂດຍອີງຕາມວິທີການທີ່ພວກເຈົ້ານຳສະເໜີຕົວເອງ; ສ່ວນບັນດາຜູ້ທີ່ບໍ່ແມ່ນຜູ້ທີ່ເຮົາເລືອກ, ເຮົາກໍກ່າວຕາມສະພາບການຂອງພວກເຂົາເຊັ່ນກັນ. ເພາະສະນັ້ນ, ພຣະທຳຂອງເຮົາໄດ້ຖືກກ່າວເຖິງຈຸດໃດໜຶ່ງ; ພວກເຈົ້າແຕ່ລະຄົນຄວນມີຄວາມຮູ້ສຶກທີ່ດີກ່ຽວກັບເລື່ອງນັ້ນ. ຢ່າຫຼອກລວງຕົວເອງເລີຍ! ຢ່າຢ້ານ! ຍ້ອນວ່າຈຳນວນຂອງຜູ້ຄົນຖືກຈຳກັດຢູ່ພຽງບໍ່ເທົ່າໃດຄົນເທົ່ານັ້ນ, ການຫຼອກລວງຈະບໍ່ໄດ້ຜົນ! ຜູ້ໃດກໍຕາມທີ່ເຮົາເວົ້າວ່າຖືກເລືອກກໍແມ່ນຜູ້ທີ່ຖືກເລືອກ ແລະ ບໍ່ວ່າເຈົ້າອາດເກັ່ງໃນການທຳທ່າ, ຫາກປາສະຈາກຄຸນນະພາບຂອງເຮົາ ເຈົ້າກໍຈະລົ້ມເຫຼວ. ຍ້ອນວ່າເຮົາຮັກສາພຣະທຳຂອງເຮົາ, ເຮົາບໍ່ທຳລາຍແຜນການຂອງຕົນເອງຕາມອຳເພີໃຈ; ເຮົາເຮັດສິ່ງໃດໜຶ່ງຕາມທີ່ເຮົາຕ້ອງການເຮັດ ຍ້ອນວ່າທຸກສິ່ງທີ່ເຮົາເຮັດນັ້ນຖືກຕ້ອງ. ເຮົາສູງສົ່ງ ແລະ ເຮົາເປັນເອກະລັກ. ເຈົ້າຊັດເຈນໃນເລື່ອງນີ້ບໍ? ເຈົ້າເຂົ້າໃຈບໍ?

ປັດຈຸບັນນີ້, ຫຼັງຈາກທີ່ໄດ້ອ່ານພຣະທຳຂອງເຮົາ, ບັນດາຜູ້ທີ່ເຮັດຄວາມຊົ່ວ ແລະ ຜູ້ທີ່ຄົດໂກງ ແລະ ຫຼອກລວງ ກໍເຮັດວຽກໜັກເພື່ອສະແຫວງຫາຄວາມຄືບໜ້າ ແລະ ສ້າງຄວາມພະຍາຍາມ

ສ່ວນຕົວຂອງພວກເຂົາເອງ. ພວກເຂົາຕ້ອງການຈ່າຍລາຄານ້ອຍໆເພື່ອລັກເຂົ້າໃນອານາຈັກຂອງເຮົາ. ພວກເຂົາຄວນປະຖິ້ມຄວາມຄິດແບບນັ້ນເສຍ! (ຄົນເຫຼົ່ານີ້ບໍ່ມີຄວາມຫວັງ ຍ້ອນວ່າເຮົາບໍ່ໃຫ້ໂອກາດພວກເຂົາກັບໃຈ). ເຮົາປົກປ້ອງປະຕູສູ່ອານາຈັກຂອງເຮົາ. ເຈົ້າເຊື່ອວ່າຜູ້ຄົນສາມາດເຂົ້າອານາຈັກຂອງເຮົາໄດ້ຕາມທີ່ພວກເຂົາປາຖະໜາບໍ? ເຈົ້າເຊື່ອວ່າອານາຈັກຂອງເຮົາຈະຮັບເອົາຂອງເກົ່າທີ່ບໍ່ໃຊ້ແບບໃດກໍໄດ້ບໍ? ອານາຈັກຂອງເຮົາຈະເອົາຂີ້ເຫຍື້ອທີ່ບໍ່ມີຄ່າແບບໃດກໍໄດ້ບໍ? ເຈົ້າຜິດແລ້ວ! ປັດຈຸບັນນີ້, ບັນດາຜູ້ທີ່ຢູ່ໃນອານາຈັກແມ່ນຜູ້ທີ່ມີອຳນາດຂອງກະສັດຮ່ວມກັບເຮົາ; ເຮົາໄດ້ປູກຝັງພວກເຂົາຢ່າງລະມັດລະວັງ. ນີ້ບໍ່ແມ່ນສິ່ງທີ່ສາມາດບັນລຸໄດ້ໂດຍຕ້ອງການມັນ; ເຈົ້າຕ້ອງໄດ້ຮັບການອະນຸມັດຈາກເຮົາ. ຍິ່ງໄປກວ່ານັ້ນ, ນີ້ບໍ່ແມ່ນບາງສິ່ງທີ່ຈະສົນທະນາກັບໃຜກໍໄດ້; ມັນແມ່ນສິ່ງທີ່ເຮົາຈັດແຈງດ້ວຍຕົວເອງ. ທຸກສິ່ງເປັນໄປຕາມທີ່ເຮົາກ່າວ. ຄວາມລຶກລັບຂອງເຮົາໄດ້ຖືກເປີດເຜີຍແກ່ຜູ້ທີ່ເຮົາຮັກ. ສ່ວນບັນດາຜູ້ທີ່ເຮັດຄວາມຊົ່ວ, ນັ້ນກໍຄື ບັນດາຜູ້ທີ່ເຮົາບໍ່ໄດ້ເລືອກ ບໍ່ມີສິດທີ່ຈະໄດ້ຮັບພວກມັນ. ເຖິງແມ່ນວ່າພວກເຂົາໄດ້ຍິນຄວາມລຶກລັບເຫຼົ່ານີ້, ພວກເຂົາກໍຈະບໍ່ເຂົ້າໃຈ ຍ້ອນວ່າຊາຕານປິດຕາພວກເຂົາໄວ້ ແລະ ຍຶດຫົວໃຈຂອງພວກເຂົາ, ທຳລາຍການເປັນຢູ່ທັງໝົດຂອງພວກເຂົາ. ເປັນຫຍັງຈຶ່ງເວົ້າວ່າ ການກະທຳຂອງເຮົາໜ້າງຶດງໍ້ ແລະ ມີສະຕິປັນຍາ ແລະ ເຮົາລະດົມທຸກສິ່ງໃຫ້ຢູ່ໃນການຮັບໃຊ້ເຮົາ? ເຮົາຈະມອບບັນດາຜູ້ທີ່ບໍ່ໄດ້ຖືກເຮົາກຳນົດໄວ້ລ່ວງໜ້າ ແລະ ເລືອກໃຫ້ແກ່ຊາຕານລົງໂທດ ແລະ ເຮັດໃຫ້ພວກເຂົາເສື່ອມຊາມ ແລະ ເຮົາຈະບໍ່ເດ່ມືໄປລົງໂທດພວກເຂົາ; ນີ້ຄື ເຮົາມີສະຕິປັນຍາຫຼາຍສໍ່າໃດ! ໃຜເຄີຍຄິດເຖິງເລື່ອງນີ້ບໍ? ພາລະກິດອັນຍິ່ງໃຫຍ່ຂອງເຮົາໄດ້ສຳເລັດລົງໂດຍບໍ່ຕ້ອງພະຍາຍາມຫຍັງເລີຍ ບໍ່ແມ່ນບໍ?

# ບົດທີ 82

ເມື່ອໄດ້ຍິນພຣະທຳຂອງເຮົາ, ທຸກຄົນກໍ່ຢ້ານກົວ; ທຸກໆຄົນເຕັມໄປດ້ວຍຄວາມກັງວົນໃຈ. ເຈົ້າຢ້ານຫຍັງ? ເຮົາບໍ່ໄດ້ກຳລັງຈະຂ້າພວກເຈົ້າ! ມັນຄືພວກເຈົ້າມີຄວາມສຳນຶກຜິດ; ສິ່ງທີ່ເຈົ້າເຮັດລັບຫຼັງເຮົານັ້ນຊ່າງບໍ່ສຳຄັນ ແລະ ບໍ່ມີຄ່າ. ສິ່ງນີ້ໄດ້ເຮັດໃຫ້ເຮົາກຽດຊັງເຈົ້າຫຼາຍຈົນເຮົາປາຖະໜາຢ່າງແຮງກ້າວ່າເຮົາຈະໂຍນທຸກຄົນທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ ແລະ ຄັດເລືອກນັ້ນລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ, ຖືກທຸບເປັນຕ່ອນໆ. ແນວໃດກໍຕາມ, ເຮົາມີແຜນການຂອງເຮົາ; ເຮົາມີເປົ້າໝາຍຂອງເຮົາ. ເຮົາຈະປ່ອຍຊີວິດທີ່ນ້ອຍໆຂອງເຈົ້າໄວ້ໃນຂະນະນີ້ ແລະ ຍັບຍັ້ງທີ່ຈະເຕະເຈົ້າອອກຈົນກວ່າການຮັບໃຊ້ຂອງເຈົ້າສຳລັບເຮົາຈະສິ້ນສຸດລົງ. ເຮົາບໍ່ຢາກເຫັນສິ່ງມີຊີວິດເຊັ່ນນັ້ນ; ພວກເຂົາເປັນຄວາມອັບອາຍຕໍ່ນາມຂອງເຮົາ! ເຈົ້າຮູ້ເລື່ອງນີ້ບໍ? ເຈົ້າເຂົ້າໃຈບໍ? ຄົນເວດທະນາທີ່ໄຮ້ຄ່າເອີຍ! ຈົ່ງຈື່ສິ່ງນີ້ໃສ່ຫົວເຈົ້າເອົາໄວ້! ເມື່ອເຈົ້າຖືກນຳໄປໃຊ້, ແມ່ນເຮົາທີ່ກະທຳເຊັ່ນນັ້ນ ແລະ ເມື່ອເຈົ້າບໍ່ຖືກນຳໄປໃຊ້, ນີ້ກໍເປັນຍ້ອນເຮົາເຊັ່ນກັນ. ທຸກສິ່ງໄດ້ຖືກເຮົາປັ້ນແຕ່ງ ແລະ ໃນມືຂອງເຮົາ ທຸກສິ່ງປະພຶດດີ ແລະ ເປັນລະບຽບ. ໃຜກໍຕາມທີ່ກ້າຍ້າຍໃນຊ່ວງເວລາທີ່ບໍ່ເໝາະສົມ ກໍຈະຖືກມືຂອງເຮົາຟາດລົງທັນທີ. ເຮົາເວົ້າເລື້ອຍໆວ່າ "ຟາດລົງ"; ເຈົ້າຄິດວ່າເຮົາເຮັດສິ່ງນັ້ນດ້ວຍມືຂອງເຮົາເອງແທ້ໆບໍ? ເຮົາບໍ່ຈຳເປັນຕ້ອງເຮັດ! ການກະທຳຂອງເຮົາບໍ່ໄດ້ໂງ່ຈ້າແບບທີ່ມະນຸດຄິດ. ເມື່ອເວົ້າວ່າທຸກສິ່ງໄດ້ຖືກກຳນົດຂຶ້ນ ແລະ ສຳເລັດລົງດ້ວຍພຣະທຳຂອງເຮົານັ້ນ ມັນໝາຍຄວາມວ່າແນວໃດ? ທຸກສິ່ງສຳເລັດລົງໂດຍທີ່ເຮົາບໍ່ຕ້ອງຍົກແມ່ນແຕ່ນິ້ວມື. ເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຂອງຂອງພຣະທຳຂອງເຮົາບໍ?

ເຮົາຈະບໍ່ນຳເອົາຄວາມລອດມາສູ່ຜູ້ໃດທີ່ເຮັດບໍລິການສຳລັບຮັບໃຊ້ເຮົາ; ພວກເຂົາບໍ່ມີສ່ວນໃນອານາຈັກຂອງເຮົາ. ນີ້ກໍຍ້ອນວ່າ ຄົນເຫຼົ່ານີ້ພຽງແຕ່ຫຍຸ້ງຢູ່ກັບເລື່ອງພາຍນອກເທົ່ານັ້ນ, ແທນທີ່ຈະປະຕິບັດຄວາມປະສົງຂອງເຮົາ. ເຖິງແມ່ນວ່າເຮົາກຳລັງໃຊ້ພວກເຂົາໃນຕອນນີ້, ແຕ່ໃນຄວາມເປັນຈິງແລ້ວພວກເຂົາແມ່ນຄົນທີ່ເຮົາກຽດຊັງທີ່ສຸດ; ຄົນທີ່ເຮົາລັງກຽດທີ່ສຸດ. ມື້ນີ້ ເຮົາຮັກໃຜກໍຕາມທີ່ສາມາດປະຕິບັດຄວາມປະສົງຂອງເຮົາ, ໃຜກໍຕາມທີ່ສາມາດສະແດງຄວາມເປັນຫ່ວງຕໍ່ພາລະຂອງເຮົາ ແລະ ໃຜກໍຕາມທີ່ສາມາດມອບທັງໝົດຂອງພວກເຂົາໃຫ້ແກ່ເຮົາດ້ວຍຫົວໃຈທີ່ແທ້ຈິງ ແລະ ດ້ວຍຄວາມຈິງໃຈ. ເຮົາຈະໃຫ້ຄວາມສະຫວ່າງແກ່ພວກເຂົາຢູ່ສະເໝີ ແລະ ບໍ່ປ່ອຍໃຫ້ພວກເຂົາຫຼູດລອຍໄປຈາກເຮົາ. ເຮົາກ່າວຢູ່ເລື້ອຍໆວ່າ "ສຳລັບຄົນທີ່ເສຍສະຫຼະເພື່ອເຮົາຢ່າງຈິງໃຈ, ເຮົາຈະອວຍພອນເຈົ້າຢ່າງຫຼວງຫຼາຍແນ່ນອນ". "ອວຍພອນ" ໝາຍເຖິງຫຍັງ? ເຈົ້າຮູ້ບໍ? ໃນບໍລິບົດແຫ່ງພາລະກິດປັດຈຸບັນຂອງພຣະວິນຍານບໍລິສຸດ, ມັນໝາຍເຖິງພາລະທີ່ເຮົາມອບໃຫ້ເຈົ້າ. ສຳລັບທຸກຄົນທີ່ສາມາດແບກພາລະຂອງຄຣິສຕະຈັກ ແລະ ຜູ້ທີ່ຖວາຍຕົວເອງເພື່ອຜົນປະໂຫຍດຂອງເຮົາ, ພາລະຂອງພວກເຂົາ ແລະ ຄວາມຈິງຈັງຂອງພວກເຂົາ ແມ່ນພອນທັງສອງທີ່ມາຈາກເຮົາ. ນອກຈາກນັ້ນ, ການເປີດເຜີຍຂອງເຮົາແກ່ພວກເຂົາກໍແມ່ນພອນຈາກເຮົາເຊັ່ນກັນ. ນີ້ກໍຍ້ອນວ່າ ບັນດາຜູ້ທີ່ບໍ່ມີພາລະໃນປັດຈຸບັນແມ່ນບັນດາຜູ້ທີ່ບໍ່ໄດ້ຖືກເຮົາກຳນົດໄວ້ລ່ວງໜ້າ ແລະ ຖືກຄັດເລືອກ; ຄຳສາບແຊ່ງຂອງເຮົາໄດ້ລົງມາສູ່

ພວກເຂົາແລ້ວ. ເວົ້າອີກຢ່າງໜຶ່ງວ່າ, ບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ຄັດເລືອກມີສ່ວນຮ່ວມໃນດ້ານບວກຂອງສິ່ງທີ່ເຮົາໄດ້ກ່າວ ໃນຂະນະທີ່ບັນດາຜູ້ທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ ແລະ ຄັດເລືອກພຽງແຕ່ສາມາດມີສ່ວນໃນດ້ານລົບຂອງພຣະຄຳຂອງເຮົາເທົ່ານັ້ນ. ຍິ່ງພຣະທຳຂອງເຮົາຖືກກ່າວຫຼາຍເທົ່າໃດ ຄວາມໝາຍຂອງພວກມັນກໍຍິ່ງຊັດເຈນຂຶ້ນເທົ່ານັ້ນ; ຍິ່ງເຮົາກ່າວພວກມັນຫຼາຍເທົ່າໃດພວກມັນກໍຍິ່ງໂປ່ງໃສຫຼາຍເທົ່ານັ້ນ. ທຸກຄົນໃນບັນດາຜູ້ທີ່ຄິດໂກງ ແລະ ຫຼອກລວງ ແລະ ຜູ້ທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ ໄດ້ຖືກເຮົາສາບແຊ່ງແຕ່ກ່ອນການສ້າງໂລກແລ້ວ. ເປັນຫຍັງຈຶ່ງເວົ້າວ່າ ປີ, ເດືອນ, ມື້ ແລະ ແມ່ນແຕ່ຊົ່ວໂມງ, ນາທີ ແລະ ວິນາທີຂອງການເກີດຂອງພວກເຈົ້າລ້ວນແລ້ວແຕ່ຖືກເຮົາວາງແຜນໄວ້ຢ່າງເໝາະສົມ? ເຮົາໄດ້ກຳນົດໄວ້ດົນນານແລ້ວວ່າໃຜຈະບັນລຸສະຖານະຂອງລູກຊາຍກົກ. ພວກເຂົາຢູ່ໃນສາຍຕາຂອງເຮົາ; ເຮົາຖືວ່າພວກເຂົາມີຄ່າແຕ່ດົນແລ້ວ ແລະ ໄດ້ມີບ່ອນໃນໃຈຂອງເຮົາມາດົນແລ້ວ. ພຣະທຳທຸກຂໍ້ທີ່ເຮົາກ່າວແມ່ນມີນໍ້າໜັກ ແລະ ມີແນວຄວາມຄິດຂອງເຮົາ. ມະນຸດແມ່ນຫຍັງ? ຍົກເວັ້ນໜ້ອຍຄົນທີ່ເຮົາຮັກ, ຜູ້ມີສະຖານະຂອງລູກຊາຍກົກ, ໜ້ອຍຄົນໃດສະແດງການພິຈາລະນາຕໍ່ຄວາມປະສົງຂອງເຮົາ? ແມ່ນຫຍັງຄືຄຸນຄ່າຂອງລູກຊາຍເຮົາ? ແມ່ນຫຍັງຄືຄຸນຄ່າຂອງຄົນຂອງເຮົາ? ໃນອະດີດ ຄຳວ່າ "ລູກຊາຍຂອງເຮົາ" ແມ່ນຕຳແໜ່ງສຳລັບລູກຊາຍກົກຂອງເຮົາ, ແຕ່ບັນດາລູກຊາຍ ແລະ ຄົນຂອງເຮົາທີ່ບໍ່ຮູ້ຈັກຄວາມອັບອາຍຄິດວ່າມັນແມ່ນນາມມະຍົດທີ່ມີກຽດສຳລັບຕົວເອງ. ຢ່າເຮັດບົດບາດຂອງລູກຊາຍກົກຂອງເຮົາຢ່າງໄຮ້ຢາງອາຍ. ເຈົ້າສົມຄວນໄດ້ຮັບນາມມະຍົດນີ້ບໍ? ມື້ນີ້ ຄົນດຽວທີ່ໄດ້ຮັບການຢືນຢັນແມ່ນຄົນທີ່ຖືກວາງໄວ້ຢູ່ໃນຕຳແໜ່ງສຳຄັນຕໍ່ໜ້າເຮົາ; ຄົນເຫຼົ່ານີ້ໄດ້ຮັບສະຖານະຂອງລູກຊາຍກົກຂອງເຮົາ. ພວກເຂົາໄດ້ມີສ່ວນໃນບັນລັງຂອງເຮົາ, ມົງກຸດຂອງເຮົາ, ສະຫງ່າລາສີຂອງເຮົາ ແລະ ອານາຈັກຂອງເຮົາແລ້ວ. ທຸກສິ່ງທຸກຢ່າງແມ່ນຖືກຈັດແຈງຢ່າງລະອຽດໂດຍເຮົາ. ທຸກຄົນທີ່ໄດ້ຮັບສະຖານະຂອງລູກຊາຍກົກໃນມື້ນີ້ ລ້ວນແລ້ວແຕ່ໄດ້ຜ່ານຄວາມເຈັບປວດ, ການຂົ່ມເຫັງ ແລະ ຄວາມທຸກຍາກອັນຍິ່ງໃຫຍ່, ລວມເຖິງສິ່ງທີ່ພວກເຂົາໄດ້ປະສົບໃນຄອບຄົວຂອງພວກເຂົານັບຕັ້ງແຕ່ເກີດ, ຄວາມຄາດຫວັງສ່ວນຕົວຂອງພວກເຂົາເອງ, ວຽກງານ ແລະ ການແຕ່ງດອງ. ລູກຊາຍກົກເຫຼົ່ານີ້ບໍ່ໄດ້ສະຖານະນີ້ໂດຍບໍ່ໄດ້ຈ່າຍລາຄາ; ກົງກັນຂ້າມ, ພວກເຂົາໄດ້ຜ່ານທຸກລັກສະນະຂອງຊີວິດ: ດີ ແລະ ຊົ່ວ, ຂຶ້ນ ແລະ ລົງ. ທຸກຄົນທີ່ກ່ອນໜ້ານີ້ໄດ້ຮັບການນັບຖືເປັນຢ່າງສູງຈາກຄົນທົ່ວໂລກ ແລະ ຜູ້ທີ່ດຳລົງຊີວິດຢ່າງສະດວກສະບາຍຢູ່ເຮືອນ ບໍ່ມີສ່ວນໃນລູກຊາຍກົກ. ພວກເຂົາບໍ່ຄູ່ຄວນທີ່ຈະເປັນລູກຊາຍກົກ; ພວກເຂົານຳເອົາຄວາມອັບອາຍມາສູ່ນາມຂອງເຮົາ ແລະ ເຮົາບໍ່ຕ້ອງການພວກເຂົາຢ່າງແນ່ນອນ. ລູກຊາຍຂອງເຮົາ ແລະ ຄົນຂອງເຮົາ ຜູ້ທີ່ເຮົາໄດ້ຄັດເລືອກ ກໍມີຊື່ສຽງທີ່ດີໃນໂລກເຊັ່ນກັນ, ແຕ່ພວກເຂົາກໍຫ່າງໄກຈາກລູກຊາຍກົກຂອງເຮົາຫຼາຍ. ໃນປັດຈຸບັນ ເຮົາກຳລັງໃຊ້ບາງຄົນ, ແຕ່ທ່າມກາງພວກເຂົາ ຫຼາຍຄົນບໍ່ມີຄຸນສົມບັດທີ່ຈະເປັນຄົນຂອງເຮົາຊໍ້າ. ພວກເຂົາເປັນພຽງເປົ້າໝາຍແຫ່ງຄວາມພິນາດນິລັນດອນ; ພວກເຂົາຖືກໃຊ້ເພື່ອເຮັດການບໍລິການໃຫ້ແກ່ເຮົາສຳລັບໄລຍະເວລາໃດໜຶ່ງ, ແຕ່ບໍ່ໄດ້ມີເຈດຕະນາທີ່ຈະໃຊ້ເປັນເວລາຍາວນານ. ໃນສ່ວນເລິກຂອງຫົວໃຈຂອງເຮົາ, ເຮົາໄດ້ຕັດສິນໃຈແລ້ວວ່າຄົນໃດທີ່ຈະຖືກໃຊ້ໃນໄລຍະຍາວ. ນັ້ນກໍຄື

ບັນດາຜູ້ທີ່ເຮົາວາງໄວ້ໃນຕຳແໜ່ງທີ່ສຳຄັນແມ່ນຜູ້ທີ່ເຮົາຮັກ ແລະ ເຮົາໄດ້ເລີ່ມໃຊ້ພວກເຂົາແຕ່ດົນແລ້ວ. ເວົ້າອີກຢ່າງໜຶ່ງກໍຄື ໜ້າທີ່ຂອງພວກເຂົາໄດ້ຖືກກຳນົດໄວ້ແລ້ວ. ສ່ວນຄົນທີ່ເຮົາລັງກຽດໃນຂັ້ນຕອນປັດຈຸບັນ, ພວກເຂົາພຽງແຕ່ຖືກໃຊ້ບົນພື້ນຖານທີ່ຊົ່ວຄາວເທົ່ານັ້ນ. ເມື່ອຄົນຕ່າງຊາດມາເຖິງ, ນັ້ນແມ່ນເວລາທີ່ລູກຊາຍກົກຈະຖືກເປີດເຜີຍແກ່ພວກເຈົ້າຢ່າງຊັດເຈນ.

ຕອນນີ້ເຮົາຮຽກຮ້ອງໃຫ້ພວກເຈົ້າເຕີບໂຕໂດຍໄວ ແລະ ສະແດງຄວາມເປັນຫ່ວງຕໍ່ພາລະຂອງເຮົາ. ພາລະນີ້ບໍ່ໄດ້ຍິ່ງໃຫຍ່ເກີນໄປ ແລະ ເຮົາພຽງແຕ່ຕ້ອງການໃຫ້ພວກເຈົ້າເຮັດໃນສິ່ງທີ່ຢູ່ພາຍໃນຄວາມສາມາດຂອງພວກເຈົ້າເທົ່ານັ້ນ. ເຮົາຮູ້ວຸດທິພາວະຂອງພວກເຈົ້າ; ເຮົາຮູ້ວ່າພວກເຈົ້າສາມາດປະຕິບັດໜ້າທີ່ໃດໄດ້. ເຮົາຮູ້ຈັກທັງໝົດນີ້ ແລະ ເຮົາເຂົ້າໃຈສິ່ງເຫຼົ່ານີ້; ເຮົາພຽງແຕ່ປາຖະໜາວ່າເຈົ້າຜູ້ເປັນລູກຊາຍຂອງເຮົາຈະເຕັມໃຈປະຕິເສດຕົວເອງ ແລະ ສາມາດຮັກສິ່ງທີ່ເຮົາຮັກ, ຊັງສິ່ງທີ່ເຮົາຊັງ, ເຮັດສິ່ງທີ່ເຮົາເຮັດ ແລະ ເວົ້າສິ່ງທີ່ເຮົາເວົ້າ. ຢ່າຖືກຄວບຄຸມໂດຍອາວະກາດ, ພູມີສາດ, ເວລາ ຫຼື ບຸກຄົນໃດອື່ນ. ມັນຄືຄວາມປາຖະໜາຂອງເຮົາທີ່ຈະໃຫ້ວິນຍານຂອງພວກເຈົ້າເປັນອິດສະຫຼະ, ຢູ່ທົ່ວທຸກຫົນແຫ່ງ ແລະ ໃຫ້ພວກເຈົ້າແຕ່ລະຄົນສາມາດຢືນຢູ່ໃນຕຳແໜ່ງຂອງລູກຊາຍກົກຂອງເຮົາ. ປັດຈຸບັນນີ້ ມີໃຜແດ່ທີ່ຖວາຍການເປັນຢູ່ທັງໝົດຂອງພວກເຂົາໃຫ້ແກ່ເຮົາ? ມີໃຜແດ່ທີ່ເສຍສະຫຼະໃຫ້ກັບເຮົາຢ່າງຈິ່ງຮັກພັກດີ? ໃຜທີ່ຕື່ນຢູ່ທັງເວັນ ແລະ ຄືນເພື່ອນເຫັນແກ່ເຮົາ? ໃຜເປັນຜູ້ເບິ່ງແຍງເລື່ອງໃນຄົວເຮືອນຂອງເຮົາສຳລັບເຮົາ? ໃຜແບ່ງເບົາພາລະທີ່ຢູ່ເທິງບ່າຂອງເຮົາແດ່? ພວກເຂົາບໍ່ແມ່ນລູກຊາຍຂອງເຮົາບໍ? ທຸກສິ່ງທີ່ເຮົາເຮັດແມ່ນເພື່ອເຮັດໃຫ້ລູກຊາຍຂອງເຮົາສົມບູນ ແລະ ເຮັດເປັນການບໍລິການໃຫ້ແກ່ລູກຊາຍຂອງເຮົາ. ເຈົ້າເຂົ້າໃຈບໍ? ທັງໝົດແມ່ນເພື່ອລູກຊາຍກົກຂອງເຮົາ ແລະ ເຮົາບໍ່ໄດ້ເຮັດຜິດພາດ. ຢ່າເຮັດວຽກໜັກພາຍໃຕ້ຄວາມເຂົ້າໃຈຜິດວ່າ ເຮົາພິພາກຜູ້ຄົນຢ່າງຜິດໆ ແລະ ຢ່າຄິດວ່າເຮົາດູຖູກເຈົ້າ. ຢ່າສັນນິຖານວ່າເຮົາໃຊ້ພອນສະຫວັນທີ່ຍິ່ງໃຫຍ່ຕໍ່າເກີນໄປ ຫຼື ເຮົາໄດ້ເຮັດຜິດພາດທີ່ບໍ່ໄດ້ກຳນົດເຈົ້າໄວ້ລ່ວງໜ້າ. ມັນບໍ່ໄດ້ເປັນແນວນັ້ນ; ມັນຄືເຈົ້າບໍ່ສົມຄວນໄດ້ຮັບມັນ! ເຈົ້າຮູ້ສິ່ງນັ້ນບໍ? ຕອນນີ້ ເຮົາຈະຢືນຢັນບາງສິ່ງສຳລັບພວກເຈົ້າ: ໃຜກໍຕາມທີ່ປຸກຄວາມໂມໂຫຂອງເຮົາຢູ່ເລື້ອຍໆ ແລະ ມັກຈະເປັນເປົ້າໝາຍຂອງການວິຈານ ຫຼື ການຈັດການຂອງເຮົາ ແມ່ນເປົ້າໝາຍຂອງຄວາມໂກດຮ້າຍຂອງເຮົາຢ່າງແນ່ນອນ. ຄົນເຊັ່ນນັ້ນຈະຕາຍຢ່າງແນ່ນອນ, ສິ່ງນີ້ໄດ້ຖືກກຳນົດໄວ້ໃນຫີນ. ເຮົາໄດ້ກ່າວແລ້ວວ່າ ເຮົາຈະບໍ່ຈັດການກັບລູກຊາຍກົກຂອງເຮົາອີກຕໍ່ໄປ ຍ້ອນວ່າຄົນເຫຼົ່ານີ້ໄດ້ຜ່ານການທົດລອງທີ່ຮຸນແຮງຂອງເຮົາ ແລະ ໄດ້ຮັບການຮອງຮັບຂອງເຮົາແລ້ວ. ໃຜກໍຕາມທີ່ເຮົາແນມເບິ່ງດ້ວຍສີໜ້າເສົ້າໝອງແມ່ນຢູ່ໃນອັນຕະລາຍ. ເຈົ້າບໍ່ຢ້ານບໍ? ຫຼາຍຄົນຈະຕາຍທັນທີທີ່ພຣະທຳຂອງເຮົາອອກຈາກປາກຂອງເຮົາ. ແນວໃດກໍຕາມ, ບາງຄົນຍັງຄົງຮັກສາເນື້ອໜັງຂອງພວກເຂົາຢູ່; ມັນເປັນພຽງແຕ່ວ່າ ວິນຍານຂອງພວກເຂົາໄດ້ຕາຍ. ຕົວບົ່ງຊີ້ທີ່ຊັດເຈນທີ່ສຸດຂອງພວກເຂົາກໍຄື ພວກເຂົາບໍ່ມີພາລະກິດຂອງພຣະວິນຍານບໍລິສຸດ ແລະ ພວກເຂົາບໍ່ມີຫຍັງທີ່ດຶງພວກເຂົາໄວ້. (ພວກເຂົາໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມໃນລະດັບທີ່ຮ້າຍແຮງແລ້ວ). ເມື່ອໃດກໍ່ຕາມທີ່ເນື້ອໜັງຂອງພວກເຂົາຖືກດັບສູນໄປ, ມັນເກີດຂຶ້ນຫຼັງຈາກການວາງແຜນທີ່ເໝາະສົມໂດຍເຮົາ ແລະ ໃນເວລາທີ່ເຮົາໄດ້ລະບຸໄວ້.

ຄວາມຕາຍຝ່າຍວິນຍານຂອງພວກເຂົາບໍ່ສາມາດໃຫ້ການບໍລິການທີ່ຍິ່ງໃຫຍ່ແກ່ເຮົາໄດ້; ເຮົາຈະໃຊ້ປະໂຫຍດຈາກເນື້ອໜັງຂອງພວກເຂົາເພື່ອສະແດງໃຫ້ເຫັນເຖິງຄວາມມະຫັດສະຈັນແຫ່ງການກະທຳຂອງເຮົາ. ຈາກນີ້ ຜູ້ຄົນຈະຕ້ອງເຊື່ອໝັ້ນ; ພວກເຂົາຈະສັນລະເສີນຢ່າງບໍ່ສິ້ນສຸດ ແລະ ຈະບໍ່ມີໃຜທີ່ບໍ່ເຄົາລົບ ແລະ ຢຳເກງເຮົາ. ເຮົາບໍ່ໄດ້ຖືເບົາຕໍ່ລາຍລະອຽດໃດໆ; ທຸກຄົນຕ້ອງມີຊີວິດຢູ່ ຫຼື ຕາຍເພື່ອເຮົາ ແລະ ບໍ່ມີໃຜສາມາດຈາກໄປຈົນກວ່າພວກເຂົາໄດ້ເຮັດການບໍລິການຂອງພວກເຂົາໃຫ້ແກ່ເຮົາ. ແມ່ນແຕ່ຊາຕານກໍບໍ່ສາມາດຖອຍກັບໄປສູ່ຂຸມເລິກທີ່ບໍ່ສິ້ນສຸດຈົນກວ່າມັນໄດ້ເຮັດການບໍລິການຂອງມັນໃຫ້ແກ່ເຮົາ. ທຸກບາດກ້າວທີ່ເຮົາປະຕິບັດນັ້ນໝັ້ນຄົງ ແລະ ປອດໄພ ແລະ ເປັນພື້ນຖານທີ່ໜັກແໜ້ນ; ບໍ່ມີບາດກ້າວໃດທີ່ເຮົາປະຕິບັດທີ່ບໍ່ມີປະໂຫຍດ, ບໍ່ມີແມ່ນແຕ່ໜ້ອຍເລີຍ.

ໃຜກ້າປຽບທຽບກັບເຮົາ? ໃຜກ້າຕໍ່ຕ້ານເຮົາ? ເຮົາຈະໂຈມຕີເຈົ້າທັນທີ! ເຮົາຈະບໍ່ຖິ້ມຮ່ອງຮອຍໃດໆໄວ້ ແລະ ເນື້ອໜັງຂອງເຈົ້າຈະຖືກທຳລາຍ; ສິ່ງນີ້ເປັນຈິງແນ່ນອນ. ເມື່ອເຮົາກ່າວສິ່ງເຫຼົ່ານີ້, ເຮົາຈະປະຕິບັດພວກມັນທັນທີ ແລະ ຈະບໍ່ມີການກັບໄປອີກ. ໂລກກຳລັງພັງທະລາຍລົງໃນແຕ່ລະມື້ ແລະ ມະນຸດຊາດກໍກຳລັງພິນາດໄປໃນແຕ່ລະມື້. ໃນແຕ່ລະມື້ທີ່ຜ່ານໄປ, ອານາຈັກຂອງເຮົາກຳລັງກໍ່ຕົວ ແລະ ລູກຊາຍກົກຂອງເຮົາກໍກຳລັງເຕີບໃຫຍ່ຂຶ້ນ. ໃນແຕ່ລະມື້ ຄວາມໂກດແຄ້ນຂອງເຮົາກຳລັງເຕີບໃຫຍ່ຂຶ້ນ, ການຂ້ຽນຕີຂອງເຮົາກໍຍິ່ງຮຸນແຮງຂຶ້ນ ແລະ ພຣະທຳຂອງເຮົາກໍຍິ່ງຮຸນແຮງຂຶ້ນ. ພວກເຈົ້າຍັງລໍຖ້າໃຫ້ເຮົາກ່າວກັບພວກເຈົ້າຢ່າງອ່ອນໂຍນຂຶ້ນກວ່ານີ້ ແລະ ໃຫ້ນໍ້າສຽງຂອງເຮົານິ້ມນວນຂຶ້ນ, ແຕ່ຈົ່ງຄິດໃໝ່ເສຍ! ນໍ້າສຽງຂອງເຮົາຂຶ້ນຢູ່ກັບຄົນທີ່ເຮົາກຳລັງຈັດການຢູ່. ສຳລັບຄົນທີ່ເຮົາຮັກ, ນໍ້າສຽງຂອງເຮົາອ່ອນໂຍນ ແລະ ສະບາຍໃຈຢູ່ສະເໝີ, ແຕ່ສຳລັບພວກເຈົ້າ ເຮົາພຽງແຕ່ສາມາດສະແດງຄວາມຮຸນແຮງ ແລະ ການພິພາກສາເທົ່ານັ້ນ ເຊິ່ງນອກເໜືອຈາກນັ້ນ ເຮົາຍັງເພີ່ມການຂ້ຽນຕີ ແລະ ຄວາມໂກດແຄ້ນໃສ່. ໂດຍທີ່ບໍ່ມີຄົນໃດຮູ້ຈັກມັນ, ສະຖານະການໃນແຕ່ລະປະເທດທົ່ວໂລກກຳລັງຕຶງຄຽດຫຼາຍຂຶ້ນເລື້ອຍໆ, ພັງທະລາຍ ແລະ ຕົກລົງສູ່ຄວາມສັບສົນວຸ້ນວາຍໃນແຕ່ລະມື້. ຜູ້ນຳຂອງແຕ່ລະປະເທດຕ່າງກໍຫວັງວ່າຈະມີອຳນາດໃນທີ່ສຸດ. ມັນບໍ່ໄດ້ເຂົ້າມາໃນຄວາມຄິດຂອງພວກເຂົາແທ້ໆວ່າ ການຂ້ຽນຕີຂອງເຮົາໄດ້ມາເຖິງພວກເຂົາແລ້ວ. ພວກເຂົາສະແຫວງຫາທີ່ຈະຍຶດອຳນາດຂອງເຮົາ, ແຕ່ອຳນາດຂອງພວກເຂົາເປັນພຽງຄວາມເພີ້ຝັນເທົ່ານັ້ນ! ແມ່ນແຕ່ຜູ້ນຳຂອງສະຫະປະຊາຊາດກໍຕ້ອງຂໍອະໄພຈາກເຮົາ. ການກະທຳທີ່ຊົ່ວຮ້າຍທີ່ລາວໄດ້ເຮັດມີຈຳນວນຫຼວງຫຼາຍ. ຕອນນີ້ແມ່ນເວລາສຳລັບການຂ້ຽນຕີ ແລະ ເຮົາຈະບໍ່ປ່ອຍລາວໄປງ່າຍໆ. ທຸກຄົນທີ່ມີອຳນາດຕ້ອງຖອດມົງກຸດຂອງພວກເຂົາອອກ; ມີພຽງແຕ່ເຮົາເທົ່ານັ້ນທີ່ສົມຄວນປົກຄອງເໜືອທຸກສິ່ງ. ທຸກສິ່ງຂຶ້ນກັບເຮົາ, ທັງໝົດນັ້ນເລີຍ ລວມເຖິງແມ່ນແຕ່ຄົນຕ່າງຊາດຈຳນວນໜຶ່ງ. ເຮົາຈະໂຈມຕີໃຜກໍຕາມທີ່ກວດສອບເຮົາໂດຍທັນທີ ຍ້ອນສິ່ງນີ້ບົ່ງບອກວ່າພາລະກິດຂອງເຮົາໄດ້ມາໄກພຽງໃດ. ໄດ້ເຫັນການເປີດເຜີຍໃໝ່ໃນທຸກໆວັນ; ມີຄວາມສະຫວ່າງໃໝ່ໃນທຸກໆວັນ. ທຸກຢ່າງຍິ່ງສົມບູນແບບຫຼາຍຂຶ້ນເລື້ອຍໆ. ມື້ສຸດທ້າຍຂອງຊາຕານໃກ້ເຂົ້າມາເລື້ອຍໆ ແລະ ເປັນທີ່ຊັດເຈນຫຼາຍຂຶ້ນ.

# ບົດທີ 83

ເຈົ້າບໍ່ຮູ້ວ່າເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ ຫຼື ຮູ້ວ່າທຸກເລື່ອງ ແລະ ທຸກສິ່ງຢູ່ພາຍໃຕ້ການຄວບຄຸມຂອງເຮົາ! ທຸກສິ່ງໄດ້ຖືກສ້າງ ແລະ ຖືກເຮັດໃຫ້ສົມບູນແບບໂດຍເຮົານັ້ນໝາຍຄວາມວ່າແນວໃດ? ພອນ ຫຼື ຄວາມໂຊກຮ້າຍຂອງທຸກຄົນ ທັງໝົດນັ້ນຂຶ້ນຢູ່ກັບການປະຕິບັດຂອງເຮົາ ແລະຂຶ້ນຢູ່ກັບການກະທຳຂອງເຮົາ. ມະນຸດສາມາດເຮັດຫຍັງໄດ້ແດ່? ມີຫຍັງແດ່ທີ່ມະນຸດສາມາດເຮັດສຳເລັດໄດ້ດ້ວຍການຄິດ? ໃນຍຸກສຸດທ້າຍນີ້, ໃນຍຸກທີ່ມືນເມົານີ້, ໃນໂລກອັນມືດມົນນີ້ທີ່ຊາຕານໄດ້ເຮັດໃຫ້ເສື່ອມຊາມຈົນເຖິງລະດັບໃດໜຶ່ງ, ມີຈັກຄົນທີ່ສອດຄ່ອງກັບຄວາມປະສົງຂອງເຮົາ? ບໍ່ວ່າຈະເປັນມື້ນີ້, ມື້ວານນີ້ ຫຼື ໃນອະນາຄົດອັນໃກ້ນີ້, ຊີວິດຂອງທຸກຄົນໄດ້ຖືກເຮົາກຳນົດໄວ້ແລ້ວ. ບໍ່ວ່າພວກເຂົາໄດ້ຮັບພອນ ຫຼື ປະສົບກັບຄວາມໂຊກຮ້າຍ ແລະ ບໍ່ວ່າພວກເຂົາຈະຖືກເຮົາຮັກ ຫຼື ຊັງ, ທຸກສິ່ງແມ່ນຖືກເຮົາກຳນົດໄວ້ໂດຍບາດດຽວຢ່າງແນ່ນອນ. ມີໃຜໃນພວກເຈົ້າທີ່ກ້າຢືນຢັນວ່າບາດກ້າວຂອງເຈົ້ານັ້ນແມ່ນເຈົ້າເອງເປັນຜູ້ກຳນົດ ແລະ ຊະຕາກຳຂອງເຈົ້າແມ່ນຢູ່ໃນການຄວບຄຸມຂອງເຈົ້າບໍ? ມີໃຜກ້າເວົ້າແບບນັ້ນບໍ? ໃຜກ້າທີ່ຈະຕໍ່ຕ້ານຢ່າງຮຸນແຮງບໍ? ໃຜທີ່ບໍ່ຢຳເກງເຮົາ? ໃຜທີ່ມີຫົວໃຈບໍ່ເຊື່ອຟັງເຮົາ? ໃຜກ້າທີ່ຈະເຮັດຕາມໃຈຕົນເອງບໍ? ເຮົາຈະຂ້ຽນຕີພວກເຂົາທັນທີ ແລະ ແນ່ນອນວ່າຈະບໍ່ມີຄວາມເມດຕາຕໍ່ມະນຸດຊາດ ຫຼື ຊ່ວຍໃຫ້ລອດພົ້ນອີກຕໍ່ໄປ. ເທື່ອນີ້ ນັ້ນກໍຄື ທັນທີໃດທີ່ພວກເຈົ້າຍອມຮັບເອົາຊື່ຂອງເຮົາ ນັ້ນກໍຈະເປັນເທື່ອສຸດທ້າຍທີ່ເຮົາຈະສະແດງຄວາມເມດຕາຕໍ່ມະນຸດຊາດ. ເວົ້າໄດ້ວ່າ ເຮົາໄດ້ເລືອກເອົາ ມະນຸດຊາດສ່ວນໜຶ່ງແລ້ວ ເຊິ່ງເຖິງແມ່ນວ່າພອນຂອງພວກເຂົາອາດຈະບໍ່ເປັນນິລັນດອນ ແຕ່ພວກເຂົາກໍຈະໄດ້ຮັບພຣະຄຸນຂອງເຮົາ; ເພາະສະນັ້ນ, ເຖິງແມ່ນວ່າມັນບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າວ່າເຈົ້າຈະໄດ້ຮັບພອນຕະຫຼອດໄປກໍຕາມ, ນັ້ນກໍບໍ່ໄດ້ໝາຍຄວາມວ່າເຈົ້າຈະຖືກປະຕິບັດຕໍ່ແບບບໍ່ຍຸຕິທຳ ແລະ ເຈົ້າກໍຍັງໂຊກດີກວ່າບັນດາຜູ້ທີ່ຈະໄດ້ຮັບໂຊກຮ້າຍໂດຍກົງ.

ແທ້ຈິງແລ້ວ ການພິພາກສາຂອງເຮົາໄດ້ມາເຖິງຈຸດສູງສຸດແລ້ວ ແລະ ກຳລັງເຂົ້າສູ່ດິນແດນທີ່ບໍ່ເຄີຍມີມາກ່ອນ. ການພິພາກສາຂອງເຮົານັ້ນຢູ່ກັບທຸກຄົນ, ປັດຈຸບັນນີ້ ມັນແມ່ນການພິພາກສາທີ່ໂຫດຮ້າຍ. ໃນອະດີດມັນແມ່ນການພິພາກສາອັນສະຫງ່າຜ່າເຜີຍ, ແຕ່ປັດຈຸບັນມັນແຕກຕ່າງກັນຫຼາຍ. ໃນອະດີດມະນຸດບໍ່ຮູ້ສຶກຢ້ານຫຍັງເລີຍຈົນວ່າພວກເຂົາໄດ້ຜະເຊີນກັບການພິພາກສາຂອງເຮົາ; ແຕ່ປັດຈຸບັນນີ້ ທັນທີທີ່ພວກເຂົາໄດ້ຍິນພຣະທຳພຽງຄຳດຽວ, ພວກເຂົາກໍຢ້ານຈົນເສຍສະຕິ; ບາງຄົນເຖິງກັບຢ້ານເມື່ອເວລາເຮົາອ້າປາກອອກ. ຖ້າສຽງຂອງເຮົາເປັ່ງອອກມາເມື່ອເວລາເຮົາເລີ່ມຕົ້ນກ່າວ, ພວກເຂົາກໍຢ້ານຫຼາຍຈົນບໍ່ຮູ້ວ່າຈະເຮັດຫຍັງເລີຍ, ໃນເວລານັ້ນພວກເຂົາໄດ້ແຕ່ປາດຖະໜາປົກປິດຕົນເອງຢູ່ໃນຂຸມໃຕ້ດິນຢ່າງເອົາຈິງເອົາຈັງ ຫຼື ລີ້ຢູ່ໃນມຸມທີ່ມືດທີ່ສຸດ. ຄົນດັ່ງກ່າວບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ ຍ້ອນວ່າພວກເຂົາໄດ້ຖືກຄອບງຳໂດຍວິນຍານຊົ່ວຮ້າຍ. ເມື່ອເຮົາພິພາກສາມັງກອນແດງໃຫຍ່ ແລະ ງູຍັກບູຮານ, ພວກມັນກໍເລີ່ມຂີ້ອາຍ ແລະ ເຖິງກັບຢ້ານຖືກຄົນອື່ນເຫັນ; ແທ້ຈິງແລ້ວ ພວກເຂົາແມ່ນລູກຫຼານຂອງຊາຕານທີ່ເກີດໃນຄວາມມືດ.

ເຮົາມັກໃຊ້ຄໍາວ່າ "ການກໍານົດໄວ້ລ່ວງໜ້າ ແລະ ການຄັດເລືອກ". ນັ້ນໝາຍເຖິງຫຍັງກັນແທ້? ເຮົາກໍານົດໄວ້ລ່ວງໜ້າ ແລະ ຄັດເລືອກແນວໃດ? ເປັນຫຍັງບາງຄົນຈຶ່ງບໍ່ແມ່ນຜູ້ທີ່ຖືກກໍານົດໄວ້ລ່ວງໜ້າ ແລະ ຖືກຄັດເລືອກ? ເຈົ້າຈະເຂົ້າໃຈສິ່ງນີ້ໄດ້ແນວໃດ? ທັງໝົດນີ້ຕ້ອງການໃຫ້ມີການອະທິບາຍຢ່າງຊັດເຈນຈາກເຮົາ ແລະ ມັນຮຽກຮ້ອງໃຫ້ເຮົາກ່າວຕໍ່ເຈົ້າໂດຍກົງ. ຖ້າເຮົາເປີດເຜີຍສິ່ງເຫຼົ່ານີ້ພາຍໃນພວກເຈົ້າ, ແລ້ວຄົນໂງ່ຈ້າກໍຈະເຊື່ອແບບຜິດໆວ່າມັນເປັນຄວາມຄິດມາຈາກຊາຕານ! ເຮົາກໍຈະຖືກໃສ່ຮ້າຍປ້າຍສີຢ່າງບໍ່ເປັນທໍາ! ບັດນີ້ ເຮົາຈະກ່າວແບບກົງໄປກົງມາ ແລະ ຈະບໍ່ຢັບຢັ້ງຫຍັງໄວ້ເລີຍ: ເມື່ອເຮົາສ້າງສັບພະສິ່ງທັງປວງ, ກ່ອນອື່ນໝົດ ເຮົາສ້າງສິ່ງຕ່າງໆເພື່ອຮັບໃຊ້ແກ່ມະນຸດຊາດ (ດອກໄມ້, ຫຍ້າ, ຕົ້ນໄມ້, ໄມ້, ພູເຂົາ, ແມ່ນໍ້າ, ທະເລສາບ, ແຜ່ນດິນ ແລະ ມະຫາສະໝຸດ, ແມງໄມ້ທຸກຊະນິດ, ນົກ ແລະ ສັດຕ່າງໆ; ບາງຢ່າງກໍເພື່ອໃຫ້ມະນຸດກິນເປັນອາຫານ ແລະ ບາງສິ່ງກໍເພື່ອໃຫ້ມະນຸດຊື່ນຊົມ). ເມັດພືດຊະນິດຕ່າງໆໄດ້ຖືກສ້າງຂຶ້ນເພື່ອມະນຸດຊາດອີງຕາມພື້ນທີ່ຕ່າງໆທີ່ແຕກຕ່າງກັນ; ຫຼັງຈາກທີ່ໄດ້ສ້າງສິ່ງຕ່າງໆເຫຼົ່ານີ້ແລ້ວເຮົາຈຶ່ງໄດ້ເລີ່ມສ້າງມະນຸດ. ມີຄົນຢູ່ສອງປະເພດ: ປະເພດທໍາອິດແມ່ນບັນດາຜູ້ທີ່ເຮົາເລືອກ ແລະ ກໍານົດໄວ້ລ່ວງໜ້າ; ປະເພດທີສອງແມ່ນຜູ້ທີ່ມີຄຸນສົມບັດຂອງຊາຕານ ແລະ ຄົນປະເພດນີ້ແມ່ນຖືກສ້າງຂຶ້ນກ່ອນເຮົາຈະສ້າງໂລກ, ແຕ່ໃນເມື່ອພວກເຂົາຖືກເສື່ອມຊາມໂດຍຊາຕານຢ່າງສິ້ນເຊີງ, ເຮົາຈຶ່ງໄດ້ປະຖິ້ມພວກເຂົາ. ແລ້ວຫຼັງຈາກນັ້ນເຮົາກໍໄດ້ສ້າງປະເພດທີ່ຖືກເຮົາເລືອກ ແລະ ກໍານົດໄວ້ລ່ວງໜ້າ, ແຕ່ລະຄົນມີຄຸນສົມບັດຂອງເຮົາໃນລະດັບທີ່ແຕກຕ່າງກັນ; ເພາະສະນັ້ນ ປັດຈຸບັນນີ້ ບັນດາຜູ້ທີ່ຖືກຄັດເລືອກໂດຍເຮົາແຕ່ລະຄົນຈຶ່ງມີຄຸນສົມບັດຂອງເຮົາໃນລະດັບທີ່ແຕກຕ່າງກັນ. ເຖິງແມ່ນວ່າ ພວກເຂົາໄດ້ຖືກເຮັດໃຫ້ເສື່ອມຊາມໂດຍຊາຕານກໍຕາມ, ພວກເຂົາກໍຍັງເປັນຄົນຂອງເຮົາຢູ່; ທຸກບາດກ້າວແມ່ນສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງເຮົາ. ເປັນການປົກຄອງທີ່ຊື່ສັດໃນອານາຈັກ ເພາະວ່າສິ່ງນີ້ໄດ້ຖືກວາງແຜນໄວ້ລ່ວງໜ້າໂດຍເຮົາ. ຄົນທີ່ຄົດໂກງ ແລະ ຫຼອກລວງຈະບໍ່ສາມາດຊື່ສັດໄດ້ ຍ້ອນວ່າ ພວກເຂົາແມ່ນເຊື້ອສາຍຂອງຊາຕານ ແລະ ຖືກຄອບງໍາໂດຍຊາຕານ; ພວກເຂົາເປັນຄົນຮັບໃຊ້ຂອງຊາຕານ ແລະ ຢູ່ພາຍໃຕ້ການບັນຊາຂອງມັນແຕ່ຕົ້ນຈົນຈົບ. ເຖິງຢ່າງໃດກໍຕາມ, ຈຸດປະສົງທັງໝົດນີ້ກໍເພື່ອເຮັດໃຫ້ຄວາມປະສົງຂອງເຮົາເປັນຈິງ. ເຮົາໄດ້ເຮັດໃຫ້ມັນຊັດເຈນເພື່ອລົບລ້າງການຄາດເດົາຂອງພວກເຈົ້າ. ຄົນທີ່ເຮົາເຮັດໃຫ້ສົມບູນ, ເຮົາຈະເບິ່ງແຍງ ແລະ ປົກປ້ອງ; ສ່ວນຄົນທີ່ເຮົາກຽດຊັງນັ້ນ, ຫຼັງຈາກທີ່ການຮັບໃຊ້ຂອງພວກເຂົາສິ້ນສຸດລົງພວກເຂົາກໍຈະໜີອອກຈາກພື້ນທີ່ຂອງເຮົາໄປ. ເຮົາໂກດຮ້າຍຢ່າງແຮງເມື່ອເວົ້າເຖິງຄົນເຫຼົ່ານີ້; ທັນໃດທີ່ເວົ້າເຖິງພວກເຂົາ, ເຮົາແມ່ນຢາກຈັດການກັບພວກເຂົາໃນທັນທີ. ຢ່າງໃດກໍຕາມ, ເຮົາກໍໄດ້ແຕ່ຢັບຢັ້ງການກະທໍາຂອງເຮົາໄວ້; ເຮົາຖືກວັດແທກໃນການກະທໍາ ແລະ ຄໍາເວົ້າຂອງເຮົາ. ເຮົາສາມາດກົດຂີ່ໂລກດ້ວຍຄວາມໂກດຮ້າຍ, ແຕ່ຍົກເວັ້ນບັນດາຜູ້ທີ່ເຮົາໄດ້ກໍານົດໄວ້ລ່ວງໜ້າ; ຫຼັງຈາກທີ່ສະຫງົບຈິດໃຈລົງແລ້ວ ເຮົາຈະຖືໂລກໄວ້ໃນກໍາມືຂອງເຮົາ. ເວົ້າອີກຢ່າງໜຶ່ງກໍຄື, ເຮົາຄວບຄຸມທຸກສິ່ງ. ເມື່ອເຮົາເຫັນວ່າໂລກໄດ້ຖືກເຮັດໃຫ້ເສື່ອມຊາມເຖິງຂັ້ນໃດໜຶ່ງຈົນຜູ້ຄົນບໍ່ສາມາດທົນໄດ້, ເຮົາກໍຈະທໍາລາຍມັນທັນທີ. ເຮົາສາມາດທໍາລາຍມັນດ້ວຍການກ່າວພຽງຄໍາດຽວເທົ່ານັ້ນ ບໍ່ແມ່ນບໍ?

ເຮົາເອງແມ່ນພຣະເຈົ້າທີ່ແທ້ຈິງ; ເຮົາບໍ່ໄດ້ສະແດງໝາຍສຳຄັນ ຫຼື ສິ່ງມະຫັດສະຈັນທີ່ເໜືອທຳມະຊາດ, ແຕ່ທຸກແຫ່ງຫົນແມ່ນເຕັມໄປດ້ວຍພາລະກິດທີ່ຍິ່ງໃຫຍ່ຂອງເຮົາ. ເສັ້ນທາງຂ້າງໜ້າຈະຮຸ່ງແຈ້ງຍິ່ງຂຶ້ນຢ່າງບໍ່ມີສິ່ງໃດປຽບທຽບໄດ້. ການເປີດເຜີຍຂອງເຮົາແຕ່ລະຂັ້ນຕອນແມ່ນເສັ້ນທາງທີ່ເຮົາຊີ້ໃຫ້ພວກເຈົ້າເຫັນ ແລະ ມັນຄືແຜນການຄຸ້ມຄອງຂອງເຮົາ. ນັ້ນເວົ້າໄດ້ວ່າ ໃນອະນາຄົດ ການເປີດເຜີຍເຫຼົ່ານີ້ຈະເພີ່ມພູນຍິ່ງຂຶ້ນ ແລະ ຊັດເຈນຫຼາຍຂຶ້ນເລື້ອຍໆ. ແມ່ນແຕ່ໃນອານາຈັກພັນປີ, ໃນອະນາຄົດອັນໃກ້ນີ້, ພວກເຈົ້າຈະຕ້ອງກ້າວໜ້າຕາມການເປີດເຜີຍ ແລະ ຕາມບາດກ້າວຂອງເຮົາ. ທຸກຢ່າງໄດ້ກາຍເປັນຮູບປະທຳແລ້ວ, ທຸກສິ່ງໄດ້ຖືກຈັດຕຽມໄວ້ແລ້ວ; ສຳລັບຜູ້ທີ່ຈະໄດ້ຮັບພອນ ມີພອນນິລັນດອນລໍຖ້າພວກເຈົ້າຢູ່, ສ່ວນຄົນຊົ່ວຮ້າຍກໍຈະມີການຂ້ຽນຕີຢ່າງນິລັນດອນລໍຖ້າພວກເຂົາຢູ່. ຄວາມເລິກລັບຂອງເຮົາແມ່ນຫຼາຍເກີນໄປສຳລັບພວກເຈົ້າ; ພຣະທຳທີ່ງ່າຍທີ່ສຸດສຳລັບເຮົາອາດຈະຍາກທີ່ສຸດສຳລັບພວກເຈົ້າ. ເພາະສະນັ້ນ ເຮົາຈຶ່ງເວົ້າແລ້ວເວົ້າອີກ ຍ້ອນວ່າ ພວກເຈົ້າເຂົ້າໃຈໜ້ອຍຫຼາຍ ແລະ ຕ້ອງການໃຫ້ເຮົາອະທິບາຍເທື່ອລະຄຳ ແລະ ທຸກໆຄຳ, ແຕ່ບໍ່ຕ້ອງກັງວົນຫຼາຍເກີນໄປ; ເຮົາຈະກ່າວກັບພວກເຈົ້າຕາມພາລະກິດຂອງເຮົາ.

# ບົດທີ 84

ຍ້ອນພວກເຂົາຂາດຄວາມຮູ້ກ່ຽວກັບເຮົາ, ມະນຸດຈຶ່ງໄດ້ຂັດຂວາງການຄຸ້ມຄອງຂອງເຮົາ ແລະ ໄດ້ທຳລາຍແຜນການຂອງເຮົານັບຄັ້ງບໍ່ຖ້ວນ ແຕ່ພວກເຂົາບໍ່ເຄີຍສາມາດຂັດຂວາງຂັ້ນຕອນທີ່ກ້າວໜ້າຂອງເຮົາໄດ້. ນີ້ກໍຍ້ອນວ່າເຮົາແມ່ນພຣະເຈົ້າທີ່ມີສະຕິປັນຍາ. ໃນຕົວເຮົາແມ່ນມີສະຕິປັນຍາທີ່ບໍ່ສິ້ນສຸດ ແລະ ໃນຕົວເຮົາແມ່ນມີຄວາມລຶກລັບທີ່ບໍ່ມີຂອບເຂດ ແລະ ບໍ່ສາມາດຢັ່ງຮູ້ໄດ້. ຕັ້ງແຕ່ອະດີດຕະການ, ມະນຸດບໍ່ເຄີຍສາມາດຢັ່ງຮູ້ ແລະ ເຂົ້າໃຈສິ່ງເຫຼົ່ານີ້ໄດ້ຢ່າງຄົບຖ້ວນ. ນັ້ນບໍ່ແມ່ນບໍ? ບໍ່ພຽງແຕ່ມີສະຕິປັນຍາໃນພຣະທຳທຸກຂໍ້ທີ່ເຮົາກ່າວ ແຕ່ວ່າແຕ່ລະພຣະທຳກໍຍັງມີຄວາມລຶກລັບທີ່ປົດບັງໄວ້ຂອງເຮົາອີກດ້ວຍ. ກັບເຮົາ, ທຸກສິ່ງແມ່ນຄວາມລຶກລັບ; ທຸກສ່ວນຂອງເຮົາແມ່ນຄວາມລຶກລັບ. ມື້ນີ້ພວກເຈົ້າພຽງແຕ່ໄດ້ເຫັນຄວາມລຶກລັບ ເຊິ່ງພວກເຈົ້າໄດ້ເຫັນຕົວຕົນຂອງເຮົາ ແຕ່ພວກເຈົ້າຍັງບໍ່ທັນໄດ້ໄຂຄວາມລຶກລັບນີ້ທີ່ຖືກປົດບັງໄວ້ພາຍໃນ. ມະນຸດສາມາດເຂົ້າສູ່ອານາຈັກຂອງເຮົາໂດຍການຕິດຕາມການນຳພາຂອງເຮົາເທົ່ານັ້ນ; ບໍ່ດັ່ງນັ້ນ ພວກເຂົາກໍຄືງພິນາດໄປພ້ອມກັບໂລກ ແລະ ກາຍເປັນຂີ້ເທົ່າ. ເຮົາແມ່ນພຣະເຈົ້າເອງທີ່ສົມບູນ; ເຮົາບໍ່ແມ່ນຜູ້ໃດອື່ນ ແຕ່ແມ່ນພຣະເຈົ້າເອງ. ມີຄຳເວົ້າກ່ອນໜ້ານີ້ເຊັ່ນ "ການສຳແດງຕົວຂອງພຣະເຈົ້າ" ໄດ້ຫຼ້າສະໄໝໄປແລ້ວ; ພວກມັນແມ່ນຂອງເກົ່າທີ່ເສື່ອມສະພາບເຊິ່ງບໍ່ສາມາດໃຊ້ງານໄດ້ອີກຕໍ່ໄປ. ມີຈັກຄົນໃນບັນດາພວກເຈົ້າທີ່ໄດ້ມາເຂົ້າໃຈໃນສິ່ງນີ້? ມີຈັກຄົນໃນບັນດາພວກເຈົ້າທີ່ໄດ້ແນ່ໃຈກ່ຽວກັບເຮົາຈົນເຖິງລະດັບນີ້? ທຸກຄົນຕ້ອງໄດ້ຮັບການອະທິບາຍ ແລະ ແນະນຳຢ່າງຈະແຈ້ງຈາກເຮົາ.

ອານາຈັກຂອງຊາຕານໄດ້ຖືກທຳລາຍ ແລະ ອີກບໍ່ດົນຄົນຂອງມັນຈະໄດ້ສຳເລັດການໃຫ້ການບໍລິການແກ່ເຮົາ. ພວກເຂົາຈະຖືກຂັບໄລ່ອອກຈາກເຮືອນຂອງເຮົາເທື່ອລະຄົນ ເຊິ່ງໝາຍຄວາມວ່າຜູ້ທີ່ໄດ້ປອມຕົວເປັນຄົນອື່ນໃນບົດບາດຕ່າງໆ ລ້ວນແຕ່ໄດ້ຖືກເປີດເຜີຍສີສັນທີ່ແທ້ຈິງຂອງພວກເຂົາ ແລະ ພວກເຂົາທຸກຄົນຈະຖືກຕັດອອກຈາກອານາຈັກຂອງເຮົາ. ຈົ່ງຢ່າລືມ! ນັບແຕ່ມື້ນີ້ເປັນຕົ້ນໄປ, ທຸກຄົນທີ່ເຮົາປະຖິ້ມ ລວມເຖິງບັນດາຜູ້ທີ່ເຮົາປະຖິ້ມໃນອະດີດແມ່ນເປັນຄົນທີ່ພຽງແຕ່ສະແດງ ແລະ ພຽງແຕ່ທຳທ່າ; ພວກເຂົາພຽງແຕ່ສະແດງໃຫ້ເຮົາເບິ່ງ ແລະ ເມື່ອການສະແດງນີ້ສິ້ນສຸດລົງ, ພວກເຂົາກໍຕ້ອງລົງຈາກເວທີ. ບັນດາຜູ້ທີ່ເປັນບຸດຊາຍຂອງເຮົາຢ່າງແທ້ຈິງຈະຢູ່ໃນອານາຈັກຂອງເຮົາຢ່າງເປັນທາງການເພື່ອຮັບເອົາຄວາມຮັກຂອງເຮົາ ແລະ ຮັບພອນທີ່ເຮົາໄດ້ຈັດຕຽມໄວ້ສຳລັບພວກເຈົ້າແລ້ວ. ພອນຈົ່ງມີແກ່ບຸດຊາຍກົກ! ຍ້ອນວ່າພວກເຈົ້າໄດ້ຖືກເຮົາອົບຮົມລ່ວງໜ້າ, ຕອນນີ້ພວກເຈົ້າເໝາະສົມກັບການໃຊ້ຂອງເຮົາ. ຈົ່ງເຊື່ອວ່າເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ. ສິ່ງຕ່າງໆທີ່ຄົນບໍ່ສາມາດເຮັດໃຫ້ສຳເລັດນັ້ນ ເຮົາສາມາດເຮັດໄດ້ໂດຍບໍ່ມີອຸປະສັກໃດໆ ແລະ ບໍ່ມີບ່ອນສຳລັບການແຂ່ງຂັນຢ່າງແນ່ນອນ. ຢ່າສະຫຼຸບວ່າພວກເຈົ້າບໍ່ສາມາດເຮັດຫຍັງໄດ້ ຫຼື ວ່າພວກເຈົ້າບໍ່ເໝາະສົມທີ່ຈະເປັນບຸດຊາຍກົກຂອງເຮົາ. ພວກເຈົ້າຄູ່ຄວນແທ້ໆ! ນີ້ກໍຍ້ອນວ່າທຸກສິ່ງຂຶ້ນຢູ່ກັບເຮົາເພື່ອຈະໄດ້ກະທຳ; ພວກມັນທັງໝົດເພິ່ງພາເຮົາເພື່ອໃຫ້ສຳເລັດ. ເປັນຫຍັງຕອນນີ້ພວກເຈົ້າຈຶ່ງຮູ້ສຶກວ່າພວກເຈົ້າມີວຸດທິພາວະເຊັ່ນນັ້ນ?

ນີ້ເປັນພຽງຍ້ອນເວລາທີ່ເຮົາຈະໃຊ້ພວກເຈົ້າຢ່າງແທ້ຈິງນັ້ນຍັງບໍ່ທັນມາຮອດເທື່ອ. ພອນສະຫວັນທີ່ຍິ່ງໃຫຍ່ບໍ່ສາມາດຖືກໃຊ້ກັບຈຸດປະສົງທີ່ເລັກນ້ອຍໄດ້; ພວກເຈົ້າເຂົ້າໃຈບໍ? ໃນໂລກຈັກກະວານທັງໝົດ, ພວກເຈົ້າພຽງແຕ່ຖືກຈຳກັດຢູ່ປະເທດຈີນນ້ອຍໆບໍ? ນັ້ນກໍຄື ປະຊາຊົນທັງໝົດໃນໂລກຈັກກະວານຈະຖືກມອບໃຫ້ພວກເຈົ້າເພື່ອລ້ຽງດູ ແລະ ນຳພາ ເພາະວ່າພວກເຈົ້າແມ່ນບຸດຊາຍກົກ ແລະ ການນຳພາອ້າຍນ້ອງຂອງພວກເຈົ້າກໍແມ່ນໜ້າທີ່ຂອງພວກເຈົ້າທີ່ຕ້ອງປະຕິບັດ. ຈົ່ງຮູ້ສິ່ງນີ້ໄວ້! ເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ! ເຮົາຂໍຢໍ້າອີກເທື່ອໜຶ່ງວ່າເຮົາກຳລັງອະນຸຍາດໃຫ້ພວກເຈົ້າມີຄວາມສຸກກັບຕົວເອງ. ເຮົາແມ່ນຜູ້ທີ່ກຳລັງປະຕິບັດພາລະກິດ, ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດຢູ່ທົ່ວທຸກບ່ອນ ແລະ ກຳລັງນຳພາດ້ວຍຕົວເອງ.

ໃນອະດີດ, ຄົນບໍ່ເຂົ້າໃຈກ່ຽວກັບຄວາມລອດພົ້ນຂອງເຮົາ. ຕອນນີ້ເຈົ້າເຂົ້າໃຈບໍ? ມີຫຼາຍດ້ານກ່ຽວກັບຄວາມລອດພົ້ນຂອງເຮົາ: ດ້ານໜຶ່ງສຳລັບບາງຄົນແມ່ນບໍ່ມີການກຳນົດໄວ້ລ່ວງໜ້າຢ່າງແນ່ນອນ ເຊິ່ງໝາຍຄວາມວ່າພວກເຂົາບໍ່ສາມາດໄດ້ຮັບພຣະຄຸນຂອງເຮົາໄດ້ເລີຍ; ອີກດ້ານໜຶ່ງແມ່ນມີບັນດາຜູ້ທີ່ໄດ້ຖືກກຳນົດໄວ້ລ່ວງໜ້າຕັ້ງແຕ່ຕົ້ນ ຜູ້ທີ່ໄດ້ຮັບພຣະຄຸນຂອງເຮົາເປັນຊ່ວງໄລຍະເວລາໜຶ່ງແຕ່ຫຼັງຈາກເວລາໃດໜຶ່ງ ເຊິ່ງແມ່ນເວລາທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າແລ້ວ, ເຮົາຈະກຳຈັດພວກເຂົາ ແລະ ຈາກນັ້ນຊີວິດຂອງພວກເຂົາກໍຈະຈົບສິ້ນລົງຢ່າງສົມບູນ. ແຕ່ອີກດ້ານອື່ນແມ່ນມີບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ເລືອກ ແລະ ຜູ້ທີ່ໄດ້ຮັບພອນຕະຫຼອດການ; ພວກເຂົາໄດ້ຮັບພຣະຄຸນຂອງເຮົາແຕ່ຕົ້ນຈົນຈົບ, ລວມເຖິງຄວາມຍາກລຳບາກທີ່ພວກເຂົາໄດ້ທົນທຸກມາກ່ອນ ແລະ ຫຼັງຈາກຍອມຮັບເຮົາ ລວມທັງແສງສະຫວ່າງ ແລະ ແສງເຍືອງທາງທີ່ພວກເຂົາໄດ້ຮັບຫຼັງຈາກການຍອມຮັບເຮົາ. ນັບແຕ່ນີ້ເປັນຕົ້ນໄປ, ພວກເຂົາຈະເລີ່ມຮັບພອນ ເຊິ່ງໝາຍຄວາມວ່າ ພວກເຂົາແມ່ນຜູ້ທີ່ເຮົາກຳລັງຊ່ວຍໃຫ້ລອດພົ້ນຢ່າງສົມບູນ. ນີ້ແມ່ນການສະແດງອອກທີ່ເຫັນໄດ້ຊັດເຈນທີ່ສຸດເຖິງຄວາມສຳເລັດຂອງພາລະກິດອັນຍິ່ງໃຫຍ່ຂອງເຮົາ. ແລ້ວພອນໝາຍເຖິງຫຍັງ? ເຮົາຂໍຖາມພວກເຈົ້າເບິ່ງວ່າ: ພວກເຈົ້າຢາກເຮັດຫຍັງຫຼາຍທີ່ສຸດ? ພວກເຈົ້າກຽດຊັງຫຍັງຫຼາຍທີ່ສຸດ? ພວກເຈົ້າຫວັງຈະໄດ້ຮັບຫຍັງຫຼາຍທີ່ສຸດ? ພວກເຈົ້າໄດ້ຜ່ານພົ້ນຄວາມເຈັບປວດ ແລະ ຄວາມຍາກລຳບາກໃນອະດີດ, ທັງໝົດນັ້ນແມ່ນເພື່ອໃຫ້ໄດ້ຮັບເຮົາ ແລະ ເພື່ອວ່າຊີວິດຂອງພວກເຈົ້າຈະສາມາດເຕີບໃຫຍ່ຂຶ້ນ; ສິ່ງເຫຼົ່ານັ້ນປະກອບດ້ວຍພຣະຄຸນສ່ວນໜຶ່ງ. "ພອນ" ໝາຍຄວາມວ່າໃນອະນາຄົດ ພວກເຈົ້າຈະບໍ່ມີສິ່ງທີ່ພວກເຈົ້າກຽດຊັງອີກຕໍ່ໄປ ເຊິ່ງໝາຍຄວາມວ່າສິ່ງເຫຼົ່ານີ້ຈະບໍ່ມີຢູ່ໃນຊີວິດຈິງຂອງພວກເຈົ້າອີກຕໍ່ໄປ; ພວກມັນຈະໄດ້ຖືກກຳຈັດຢ່າງສິ້ນເຊີງຕໍ່ໜ້າຕໍ່ຕາພວກເຈົ້າ. ຄອບຄົວ, ວຽກງານ, ເມຍ, ຜົວ, ລູກໆ, ໝູ່ເພື່ອນ ແລະ ຍາດພີ່ນ້ອງ ແລະ ແມ່ນແຕ່ອາຫານສາມຄາບຕໍ່ມື້ທີ່ພວກເຈົ້າຊັງທຸກໆມື້ຈະໝົດໄປ. (ນີ້ບໍ່ໄດ້ໝາຍເຖິງການຈຳກັດດ້ວຍເວລາ ແລະ ຍ່າງອອກຈາກເນື້ອໜັງທັງໝົດ. ມີພຽງວິນຍານທີ່ເພິ່ງພໍໃຈຂອງເຈົ້າທີ່ສາມາດຮັກສາຮ່າງກາຍຂອງເຈົ້າໄດ້, ແຕ່ນີ້ໝາຍເຖິງຮ່າງກາຍຂອງເຈົ້າ ບໍ່ແມ່ນເນື້ອໜັງ. ເຈົ້າຈະເປັນອິດສະຫຼະ ແລະ ພົ້ນຢ່າງສົມບູນ. ນີ້ແມ່ນສິ່ງມະຫັດສະຈັນທີ່ຍິ່ງໃຫຍ່ທີ່ສຸດ ແລະ ເຫັນໄດ້ຊັດເຈນທີ່ສຸດທີ່ພຣະເຈົ້າໄດ້ສຳແດງອອກມານັບຕັ້ງແຕ່ການຊົງສ້າງໂລກ). ທຸກພາກສ່ວນຂອງດິນ

ທັງໝົດຈະຖືກກຳຈັດອອກຈາກຮ່າງກາຍຂອງພວກເຈົ້າ ແລະ ພວກເຈົ້າຈະເປັນຮ່າງກາຍຝ່າຍວິນຍານທີ່ບໍລິສຸດ ແລະ ບໍ່ມີມີນທີນຢ່າງສົມບູນ, ສາມາດເດີນທາງໄປທົ່ວຈັກກະວານ ແລະ ຈົນສຸດແຜ່ນດິນໂລກ. ນັບແຕ່ເວລານັ້ນເປັນຕົ້ນໄປ, ເຈົ້າຍັງຈະໄດ້ຮັບການກຳຈັດຈາກຄວາມລຳບາກທັງໝົດໂດຍການລ້າງ ແລະ ການຂັດຖູ ແລະ ພວກເຈົ້າກໍຈະມີຄວາມສຸກກັບຕົວເອງຢ່າງເຕັມທີ່. ນັບແຕ່ນັ້ນໄປ, ພວກເຈົ້າຈະບໍ່ຄິດກ່ຽວກັບການແຕ່ງດອງອີກຕໍ່ໄປ (ຍ້ອນວ່າເຮົາກຳລັງສິ້ນສຸດຍຸກໜຶ່ງ, ບໍ່ແມ່ນກຳລັງສ້າງໂລກ) ແລະ ຈະບໍ່ມີການເຈັບທ້ອງເກີດລູກທີ່ທໍລະມານຫຼາຍສຳລັບແມ່ຍິງອີກຕໍ່ໄປ. ພວກເຈົ້າຈະບໍ່ເຮັດວຽກ ແລະ ໃຊ້ແຮງງານອີກຕໍ່ໄປໃນອະນາຄົດ. ພວກເຈົ້າຈະຝັງລຶງເລິກໃນອ້ອມກອດແຫ່ງຄວາມຮັກຂອງເຮົາຢ່າງສົມບູນ, ຮັບພອນທີ່ເຮົາໄດ້ປະທານໃຫ້ແກ່ພວກເຈົ້າ. ນີ້ແມ່ນແນ່ນອນ. ໃນຂະນະທີ່ພວກເຈົ້າກຳລັງມີຄວາມສຸກກັບພອນເຫຼົ່ານີ້, ພຣະຄຸນຈະສືບຕໍ່ຕິດຕາມພວກເຈົ້າ. ທັງໝົດທີ່ເຮົາໄດ້ຈັດຕຽມໃຫ້ພວກເຈົ້າ ນັ້ນກໍຄືຊັບສົມບັດທີ່ຫາຍາກ ແລະ ລໍ້າຄ່າຈາກທົ່ວໂລກ ຈະຖືກມອບໃຫ້ແກ່ພວກເຈົ້າ. ຕອນນີ້, ເຈົ້າບໍ່ສາມາດມະໂນພາບ ແລະ ຈິນຕະນາການສິ່ງເຫຼົ່ານີ້ໄດ້ ແລະ ບໍ່ມີໃຜໄດ້ມີຄວາມສຸກກັບສິ່ງເຫຼົ່ານັ້ນມາກ່ອນ. ເມື່ອພອນເຫຼົ່ານີ້ມາຢູ່ຕໍ່ໜ້າພວກເຈົ້າ, ພວກເຈົ້າຈະຍິນດີຢ່າງບໍ່ສິ້ນສຸດ ແຕ່ຢ່າລືມວ່າທັງໝົດນີ້ເປັນຍ້ອນອຳນາດຂອງເຮົາ, ການກະທຳຂອງເຮົາ, ຄວາມຊອບທຳຂອງເຮົາ ແລະ ຍິ່ງໄປກວ່ານັ້ນແມ່ນຍ້ອນເດຊານຸພາບຂອງເຮົາ. (ເຮົາຈະມີຄວາມກະລຸນາຕໍ່ບັນດາຜູ້ທີ່ເຮົາເລືອກທີ່ຈະມີຄວາມກະລຸນາ ແລະ ເຮົາຈະມີຄວາມເມດຕາຕໍ່ບັນດາຜູ້ທີ່ເຮົາເລືອກທີ່ຈະມີຄວາມເມດຕາ). ໃນເວລານັ້ນ ພວກເຈົ້າຈະບໍ່ມີພໍ່ແມ່ ແລະ ຈະບໍ່ມີຄວາມສຳພັນທາງສາຍເລືອດ. ພວກເຈົ້າທັງໝົດແມ່ນຄົນທີ່ເຮົາຮັກ, ບຸດຊາຍອັນເປັນທີ່ຮັກຂອງເຮົາ. ນັບແຕ່ເວລານັ້ນເປັນຕົ້ນໄປ ຈະບໍ່ມີໃຜກ້າທີ່ຈະກົດຂີ່ພວກເຈົ້າອີກ. ມັນຈະເປັນເວລາໃຫ້ພວກເຈົ້າເຕີບໃຫຍ່ເປັນຜູ້ໃຫຍ່ ແລະ ຍັງແມ່ນເວລາເຊິ່ງພວກເຈົ້າປົກຄອງປະເທດຕ່າງໆດ້ວຍໄມ້ຄ້ອນເຫຼັກ! ຜູ້ໃດກ້າຂັດຂວາງບຸດຊາຍອັນເປັນທີ່ຮັກຂອງເຮົາ? ໃຜກ້າໂຈມຕີພວກເຂົາ? ທຸກຄົນຈະເຄົາລົບບຸດຊາຍອັນເປັນທີ່ຮັກຂອງເຮົາ ຍ້ອນວ່າພຣະບິດາໄດ້ຮັບຄວາມສະຫງ່າລາສີແລ້ວ. ທຸກສິ່ງທີ່ບໍ່ມີໃຜເຄີຍຈິນຕະນາການໄດ້ຈະປາກົດຢູ່ຕໍ່ໜ້າຕໍ່ຕາພວກເຈົ້າ; ພວກມັນຈະບໍ່ຈຳກັດ, ໝົດບໍ່ເປັນ ແລະ ບໍ່ມີທີ່ສິ້ນສຸດ. ອີກບໍ່ດົນ ແນ່ນອນວ່າພວກເຈົ້າຈະບໍ່ຈຳເປັນຕ້ອງຕາກແດດ ຫຼື ທົນກັບຄວາມຮ້ອນທີ່ທໍລະມານ ແລະ ພວກເຈົ້າຈະບໍ່ຕ້ອງທົນທຸກກັບຄວາມໜາວເຢັນ ຫຼື ສຳຜັດກັບຝົນ, ຫິມະ ແລະ ລົມອີກຕໍ່ໄປ. ນີ້ກໍຍ້ອນວ່າເຮົາຮັກພວກເຈົ້າ ແລະ ມັນຈະເປັນໂລກແຫ່ງຄວາມຮັກຂອງເຮົາທັງໝົດ. ເຮົາຈະໃຫ້ທຸກສິ່ງທີ່ພວກເຈົ້າຕ້ອງການໃຫ້ແກ່ພວກເຈົ້າ ແລະ ເຮົາຈະຈັດຕຽມທຸກສິ່ງທີ່ພວກເຈົ້າຕ້ອງການໃຫ້ແກ່ພວກເຈົ້າ. ໃຜກ້າອ້າງວ່າເຮົາບໍ່ຊອບທຳ? ເຮົາຈະຂ້າເຈົ້າທັນທີ ຍ້ອນວ່າເຮົາໄດ້ກ່າວໄວ້ກ່ອນໜ້ານີ້ແລ້ວວ່າຄວາມໂກດຮ້າຍຂອງເຮົາ (ຕໍ່ຄົນຊົ່ວຮ້າຍ) ຈະຄົງຢູ່ຕະຫຼອດໄປເປັນນິດ ແລະ ເຮົາຈະບໍ່ລົດລະແມ່ນແຕ່ໜ້ອຍເລີຍ. ແນວໃດກໍຕາມ, ຄວາມຮັກຂອງເຮົາ (ສຳລັບບຸດຊາຍທີ່ຮັກຂອງເຮົາ) ຈະຄົງຢູ່ຕະຫຼອດໄປເຊັ່ນກັນ; ເຮົາຈະບໍ່ເກັບມັນໄວ້ໃນທີ່ສຸດ.

ມື້ນີ້, ຄົນທີ່ໄດ້ຍິນພຣະທຳຂອງເຮົາວ່າເປັນການພິພາກສາ ແມ່ນບັນດາຜູ້ທີ່ບໍ່ໄດ້ຢູ່ໃນສະພາວະທີ່ຖືກຕ້ອງ. ແນວໃດກໍຕາມ, ໃນເວລາທີ່ພວກເຂົາຄົ້ນພົບນັ້ນ, ພຣະວິນຍານບໍລິສຸດກໍໄດ້ປະຖິ້ມ

ພວກເຂົາແລ້ວ. ນອກຈາກໂລກຈັກກະວານທັງໝົດ, ບຸດຊາຍກົກໄດ້ຖືກເລືອກຈາກບັນດາພວກເຈົ້າ, ໃນຂະນະທີ່ບຸດຊາຍ ແລະ ປະຊາຊົນເປັນພຽງສ່ວນນ້ອຍໆຂອງພວກເຈົ້າເທົ່ານັ້ນ. ການເໜັ້ນໜັກຂອງເຮົາແມ່ນກ່ຽວກັບໂລກຈັກກະວານທັງໝົດ ເຊິ່ງໝາຍຄວາມວ່າບຸດຊາຍ ແລະ ປະຊາຊົນໄດ້ຖືກເລືອກຈາກທຸກປະເທດຂອງໂລກ. ເຈົ້າເຂົ້າໃຈບໍ? ເປັນຫຍັງເຮົາຈຶ່ງສືບຕໍ່ເໜັ້ນໜັກວ່າບຸດຊາຍກົກຄວນເຕີບໃຫຍ່ຂຶ້ນໂດຍໄວ ແລະ ອອກໄປນຳພາຄົນຕ່າງຊາດເຫຼົ່ານັ້ນ? ເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳເຮົາບໍ? ນີ້ກໍຍ້ອນວ່າປະເທດຈີນເປັນປະເທດໜຶ່ງທີ່ເຮົາໄດ້ສາບແຊ່ງ; ມັນໄດ້ຂົ່ມເຫັງເຮົາຫຼາຍທີ່ສຸດ ແລະ ເຮົາກຽດກໍຊັງມັນທີ່ສຸດ. ເຈົ້າຕ້ອງຮູ້ວ່າບຸດຊາຍກົກຂອງເຮົາ ແລະ ເຮົາມາຈາກສະຫວັນ ແລະ ເປັນຄົນສາກົນ; ພວກເຮົາບໍ່ໄດ້ເປັນຂອງປະເທດໃດໜຶ່ງ. ເຊົາຍຶດຕິດກັບຄວາມຄິດຂອງມະນຸດໄດ້ແລ້ວ! ນີ້ກໍຍ້ອນວ່າເຮົາໄດ້ເປີດເຜີຍຕົວຕົນຂອງເຮົາໃຫ້ແກ່ພວກເຈົ້າ. ທຸກສິ່ງທຸກຢ່າງຂຶ້ນຢູ່ກັບເຮົາ. ເຈົ້າສາມາດຈື່ຈຳພຣະທຳຂອງເຮົາໄດ້ບໍ? ເປັນຫຍັງເຮົາຈຶ່ງເວົ້າວ່າມີຄົນຈຳນວນໜ້ອຍລົງເລື້ອຍໆທ່າມກາງພວກເຈົ້າ ແລະ ປະຊາກອນໄດ້ຖືກເຮັດໃຫ້ບໍລິສຸດຫຼາຍຂຶ້ນເລື້ອຍໆ? ເປັນຍ້ອນວ່າຄວາມລອດພົ້ນຂອງເຮົາກຳລັງຫັນໄປຫາໂລກຈັກກະວານເທື່ອລະໜ້ອຍ. ບັນດາຜູ້ທີ່ຖືກກຳຈັດ, ຜູ້ທີ່ໄດ້ຮັບເອົານາມຂອງເຮົາ ແມ່ນຄົນທີ່ໄດ້ໃຫ້ບໍລິການເພື່ອເຮັດໃຫ້ບຸດຊາຍກົກສົມບູນ. ເຈົ້າເຂົ້າໃຈບໍ? ເປັນຫຍັງເຮົາຈຶ່ງເວົ້າວ່າ ພວກເຂົາທັງໝົດແມ່ນຜູ້ທີ່ໄດ້ໃຫ້ການບໍລິການແກ່ບຸດຊາຍຂອງເຮົາ? ຕອນນີ້ເຈົ້າເຂົ້າໃຈຢ່າງແທ້ຈິງແລ້ວແມ່ນບໍ? ຕົວເລກແມ່ນບໍ່ພຽງພໍແທ້ໆ; ແນ່ນອນວ່າມີໜ້ອຍ. ແນວໃດກໍຕາມ, ຄົນເຫຼົ່ານັ້ນໄດ້ຮັບປະໂຫຍດຢ່າງຫຼວງຫຼາຍຍ້ອນບຸດຊາຍຂອງເຮົາ ແລະ ມີຄວາມສຸກກັບພຣະຄຸນຂອງເຮົາຫຼາຍ, ນັ້ນແມ່ນເຫດຜົນວ່າເປັນຫຍັງເຮົາຈຶ່ງເວົ້າວ່າເຮົາກຳລັງຊ່ວຍເຊື້ອຊາດມະນຸດໃຫ້ລອດພົ້ນເປັນເທື່ອສຸດທ້າຍ. ຕອນນີ້ເຈົ້າຮູ້ຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາແລ້ວ! ເຮົາຈະຂ້ຽນຕີໃຜກໍຕາມທີ່ຕໍ່ຕ້ານເຮົາຢ່າງໂຫດຮ້າຍ ແລະ ເຮົາຈະຫັນໜ້າເຂົ້າຫາໃຜກໍຕາມທີ່ປົກປ້ອງເຮົາ. ນີ້ກໍຍ້ອນວ່າ ນັບຕັ້ງແຕ່ເລີ່ມຕົ້ນ ເຮົາໄດ້ເປັນພຣະເຈົ້າທີ່ສະຫງ່າຜ່າເຜີຍ ແລະ ຊອບທຳສະເໝີມາ ແລະ ທຸກສິ່ງທຸກຢ່າງຈະຖືກເປີດເຜີຍແກ່ພວກເຈົ້າ. ເຮົາປະຕິບັດພາລະກິດຢ່າງວ່ອງໄວດ້ວຍວິທີທີ່ຍອດຢ້ຽມ ແລະ ໄວໆນີ້ ສິ່ງມະຫັດສະຈັນຕ່າງໆທີ່ມະນຸດບໍ່ສາມາດຈິນຕະນາການໄດ້ຈະເກີດຂຶ້ນ. ເຮົາໝາຍເຖິງທັນທີ ແລະ ໄວໆນີ້. ເຈົ້າເຂົ້າໃຈບໍ? ຈົ່ງສະແຫວງຫາທາງເຂົ້າສູ່ຊີວິດ, ຢ່າຊັກຊ້າເລີຍ! ບຸດຊາຍທີ່ຮັກເອີຍ, ທຸກສິ່ງຢູ່ທີ່ນີ້ແມ່ນສຳລັບພວກເຈົ້າ ແລະ ທຸກສິ່ງທີ່ມີຢູ່ກໍແມ່ນເພື່ອປະໂຫຍດຂອງພວກເຈົ້າ.

# ບົດທີ 85

ເຮົາໃຊ້ປະໂຫຍດຈາກຄົນທີ່ແຕກຕ່າງກັນເພື່ອບັນລຸຄວາມປະສົງຂອງເຮົາ: ຄໍາສາບແຊ່ງຂອງເຮົາໄດ້ເກີດເປັນຈິງກັບບັນດາຜູ້ທີ່ເຮົາຂ້ຽນຕີ ເຊັ່ນດຽວກັນກັບທີ່ພອນຂອງເຮົາເກີດເປັນຈິງກັບຜູ້ທີ່ເຮົາຮັກ. ປັດຈຸບັນນີ້, ຄໍາຖາມວ່າຜູ້ໃດໃນທ່າມກາງພວກເຈົ້າຈະໄດ້ຮັບພອນຂອງເຮົາ ແລະ ຜູ້ໃດຈະທົນທຸກກັບຄໍາສາບແຊ່ງຂອງເຮົານັ້ນ ຂຶ້ນຢູ່ກັບຄໍາເວົ້າດຽວຂອງເຮົາຢ່າງສິ້ນເຊີງ; ມັນລ້ວນແລ້ວແຕ່ຖືກກໍານົດໄວ້ໂດຍພຣະຄໍາຂອງເຮົາ. ເຈົ້າຮູ້ວ່າຜູ້ທີ່ເຮົາດີນໍາຈົນຮອດປັດຈຸບັນນີ້ໄດ້ຖືກຜູກມັດໃຫ້ໄດ້ຮັບພອນຂອງເຮົາຢູ່ສະເໝີ (ໝາຍເຖິງ ມາຮູ້ຈັກເຮົາເທື່ອລະໜ້ອຍ ແລະ ເລີ່ມໝັ້ນໃຈກ່ຽວກັບເຮົາຂຶ້ນເລື້ອຍໆ, ໄດ້ຮັບແສງສະຫວ່າງ ແລະ ການເປີດເຜີຍໃໝ່ ແລະ ສາມາດນໍາທັນບາດຍ່າງຂອງພາລະກິດຂອງເຮົາ). ໃຜກໍຕາມທີ່ເຮົາກຽດຊັງ (ນີ້ແມ່ນສິ່ງໃນຕົວເຮົາທີ່ຜູ້ຄົນບໍ່ສາມາດເຫັນຈາກຂ້າງນອກໄດ້) ແມ່ນຜູ້ທີ່ຈະທົນທຸກກັບຄໍາສາບແຊ່ງຂອງເຮົາຢ່າງແນ່ນອນ ແລະ ພວກເຂົາຢູ່ໃນທ່າມກາງບັນດາລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່ຢ່າງບໍ່ຕ້ອງສົງໄສ; ເມື່ອເປັນເຊັ່ນນັ້ນ ພວກເຂົາຈະມີສ່ວນໃນການທີ່ເຮົາສາບແຊ່ງມັນ. ສ່ວນບັນດາຜູ້ທີ່ເຮົາບໍ່ສາມາດເຫັນໄດ້ວ່າມີຄຸນນະພາບທີ່ເຮົາເຫັນວ່າຍັງຂາດເຂີນ ແລະ ຜູ້ທີ່ບໍ່ສາມາດຖືກເຮົາເຮັດໃຫ້ສົມບູນ ແລະ ໃຊ້, ພວກເຂົາຍັງຈະມີໂອກາດຖືກຊ່ວຍໃຫ້ລອດພົ້ນຢູ່ ແລະ ພວກເຂົາຈະເປັນໜຶ່ງໃນບັນດາລູກຊາຍຂອງເຮົາ. ຖ້າຜູ້ໃດຜູ້ໜຶ່ງບໍ່ມີຄຸນນະພາບໃດໆຂອງເຮົາ, ບໍ່ສາມາດເຂົ້າໃຈເລື່ອງຝ່າຍວິນຍານ ແລະ ບໍ່ຮູ້ຈັກເຮົາ ແຕ່ມີຄວາມຄິດທີ່ແຮງກ້າ, ແລ້ວຄົນໆນັ້ນກໍຈະຖືກກໍານົດໃຫ້ເປັນໜຶ່ງໃນຄົນຂອງເຮົາ. ເຮົາພິຈາລະນາຄົນຜູ້ທີ່ມີສ່ວນຮ່ວມໃນຄໍາສາບແຊ່ງຂອງເຮົາວ່າຢູ່ນອກເໜືອຄວາມລອດພົ້ນ ແລະ ພວກເຂົາແມ່ນຜູ້ທີ່ຈະຖືກວິນຍານຊົ່ວຮ້າຍຄອບງໍາ. ເຮົາກະຕືລືລົ້ນທີ່ຈະເຕະພວກເຂົາອອກ. ພວກເຂົາເກີດຈາກມັງກອນແດງຜູ້ຍິ່ງໃຫຍ່ ແລະ ເປັນຄົນທີ່ເຮົາກຽດຊັງທີ່ສຸດ. ນັບແຕ່ຈຸດນີ້ໄປ, ເຮົາບໍ່ຕ້ອງການໃຫ້ພວກເຂົາໃຫ້ບໍລິການແກ່ເຮົາ. ເຮົາພຽງແຕ່ບໍ່ຕ້ອງການພວກເຂົາອີກຕໍ່ໄປ! ເຮົາບໍ່ຕ້ອງການພວກເຂົາຈັກຄົນເລີຍ! ແມ່ນແຕ່ການຮ້ອງໄຫ້ ແລະ ກັດແຂ້ວຂອງພວກເຂົາຕໍ່ໜ້າເຮົາກໍບໍ່ມີຜົນຫຍັງ; ເຮົາບໍ່ແນມເບິ່ງພວກເຂົາຈັກຄົນ. ເຮົາພຽງແຕ່ເຕະພວກເຂົາອອກໄປ. ເຈົ້າແມ່ນສິ່ງຂອງແບບໃດ? ເຈົ້າສົມຄວນທີ່ຈະຢູ່ຕໍ່ໜ້າເຮົາບໍ? ເຈົ້າຄູ່ຄວນບໍ? ເຈົ້າຍັງທໍາທ່າວ່າເປັນຄົນດີ ແລະ ເຮັດຄືວ່າເປັນຄົນຖ່ອມຕົວ! ຫຼັງຈາກທີ່ເຈົ້າໄດ້ເຮັດການກະທໍາທີ່ຊົ່ວຮ້າຍອັນນັບບໍ່ຖ້ວນເຫຼົ່ານັ້ນທັງໝົດແລ້ວ, ເຮົາສາມາດປ່ອຍເຈົ້າໄປໄດ້ບໍ? ແລ້ວຫຼັງຈາກນັ້ນ ເຈົ້າກໍຈະລຸກຂຶ້ນຕໍ່ໜ້າເຮົາໄວກວ່າທີ່ເຈົ້າຈະເລີ່ມທ້າທາຍເຮົາອີກຄັ້ງ. ເຈົ້າບໍ່ເຄີຍມີເຈດຕະນາດີເລີຍ; ເຈົ້າພຽງຕ້ອງການທີ່ຈະຫຼອກລວງເຮົາ! ເຈົ້າສາມາດກາຍເປັນຄົນດີໄດ້ແທ້ບໍເມື່ອເຈົ້າເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່? ເປັນໄປບໍ່ໄດ້! ເຈົ້າໄດ້ຖືກເຮົາສາບແຊ່ງແລ້ວ ແລະ ເຮົາພິພາກສາເຈົ້າຕະຫຼອດໄປ! ຈົ່ງໃຫ້ການບໍລິການແກ່ເຮົາຢ່າງສຸດອົກສຸດໃຈ, ຢ່າງຊື່ສັດ ແລະ ໃນວິທີທີ່ມີລະບຽບວິໄນ ແລະ ຫຼັງຈາກນັ້ນກໍກັບໄປສູ່ຂຸມເລິກທີ່ບໍ່ສິ້ນສຸດຂອງເຈົ້າເສຍ! ເຈົ້າຕ້ອງການມີສ່ວນໃນອານາຈັກຂອງເຮົາບໍ? ເຈົ້າກໍາລັງຝັນຢູ່! ຊ່າງໄຮ້ຢາງອາຍ! ເຈົ້າພ້ອມດ້ວຍຮ່າງກາຍອັນສົກກະປົກ ແລະ ເປິເປື້ອນຂອງເຈົ້າ ໄດ້ຖືກເຮັດໃຫ້ເສື່ອມຊາມຮອດ

ລະດັບໃດໜຶ່ງ, ແຕ່ເຈົ້າຍັງໜ້າດ້ານຢືນຢູ່ຕໍ່ໜ້າເຮົາ! ຫຼີກທາງໄປ! ຖ້າເຈົ້າຊັກຊ້າອີກ, ເຮົາຈະລົງໂທດເຈົ້າຢ່າງຮ້າຍແຮງ! ທຸກຄົນທີ່ມີສ່ວນໃນຄວາມຄົດໂກງ ແລະ ຄວາມຫຼອກລວງຕໍ່ໜ້າເຮົາຕ້ອງຖືກເປີດໂປງ. ເຈົ້າຈະສາມາດລີ້ໄດ້ຢູ່ໃສ? ເຈົ້າຈະສາມາດປິດບັງຕົວເອງໄດ້ຢູ່ໃສ? ບໍ່ວ່າເຈົ້າຈະຫຼົບຫຼີກ ຫຼື ປົກປິດຫຼາຍປານໃດກໍຕາມ, ເຈົ້າສາມາດຫຼົບໜີຈາກການຄວບຄຸມຂອງເຮົາໄດ້ແທ້ໆບໍ? ຖ້າເຈົ້າບໍ່ໃຫ້ບໍລິການແກ່ເຮົາຢ່າງເໝາະສົມ ແລ້ວເຈົ້າກໍຈະມີອາຍຸຍືນທີ່ສັ້ນລົງ; ເຈົ້າກໍຈະຈິບລົງທັນທີ!

ເຮົາບອກພວກເຈົ້າດ້ວຍຄວາມຊັດເຈນທັງສິ້ນວ່າ ລູກຊາຍກົກຂອງເຮົາແມ່ນຄົນປະເພດໃດ ແລະ ເຮົາໃຫ້ຂໍ້ພິສູດທີ່ຖືກຕ້ອງແກ່ພວກເຈົ້າ. ບໍ່ດັ່ງນັ້ນ ເຈົ້າກໍຈະບໍ່ສາມາດມີຕຳແໜ່ງທີ່ເໝາະສົມຂອງເຈົ້າໄດ້ ແລະ ກົງກັນຂ້າມ ເຈົ້າຈະເຮັດການຕັດສິນໃຈໂດຍບໍ່ພິຈາລະນາສຳລັບຕົນເອງກ່ຽວກັບວ່າຕຳແໜ່ງຂອງເຈົ້າຄວນເປັນແນວໃດ. ບາງຄົນກໍຖ່ອມຕົວເກີນໄປ ແລະ ບາງຄົນກໍບໍ່ມີການຢັບຢັ້ງເກີນໄປ; ແລະ ຜູ້ທີ່ບໍ່ມີຄຸນນະພາບຂອງເຮົາ ຫຼື ຜູ້ທີ່ຄຸນນະພາບທີ່ຂາດເຂີນຫຼາຍເກີນໄປແມ່ນລ້ວນແລ້ວແຕ່ຈະປາຖະໜາເປັນລູກຊາຍກົກຂອງເຮົາ. ຜູ້ທີ່ເປັນລູກຊາຍກົກຂອງເຮົາໄດ້ສະແດງອອກມາແນວໃດ? ກ່ອນອື່ນໝົດ, ພວກເຂົາໃຫ້ຄວາມສຳຄັນກັບການເຂົ້າໃຈຄວາມປະສົງຂອງເຮົາ ແລະ ຄຳນຶງເຖິງຄວາມປະສົງນັ້ນ. ຍິ່ງໄປກວ່ານັ້ນ, ພວກເຂົາທັງໝົດມີພຣະວິນຍານບໍລິສຸດປະຕິບັດພາລະກິດໃນຕົວພວກເຂົາ. ຢ່າງທີສອງ, ພວກເຂົາສະແຫວງຫາຢ່າງບໍ່ລົດລະພາຍໃນວິນຍານຂອງພວກເຂົາ, ລະເວັ້ນຈາກການມຶນເມົາ ແລະ ຢູ່ພາຍໃນເຂດແດນຂອງເຮົາຕະຫຼອດເວລາ; ພວກເຂົາປົກກະຕິຫຼາຍທີ່ສຸດ. ຍິ່ງໄປກວ່ານັ້ນ, ໃນການກະທຳແບບນີ້ ພວກຂົາບໍ່ໄດ້ກຳລັງຮຽນແບບ. (ຍ້ອນວ່າພວກເຂົາໃຫ້ຄວາມສຳຄັນກັບການຮູ້ສຶກໄດ້ເຖິງພາລະກິດຂອງພຣະວິນຍານບໍລິສຸດ ແລະ ຄຳນຶງເຖິງຄວາມຮັກຂອງເຮົາຕໍ່ພວກເຂົາ, ພວກເຂົາລະມັດລະວັງຕະຫຼອດເວລາ ແລະ ມີຄວາມຢ້ານກົວຢ່າງຍິ່ງທີ່ຈະຕົກຢູ່ໃນຄວາມຄິດທີ່ທຳລະຍົດ ຫຼື ການຕໍ່ຕ້ານເຮົາ). ຢ່າງທີສາມ, ພວກເຂົາກະທຳຢ່າງສຸດຈິດສຸດໃຈຕໍ່ເຮົາ, ສາມາດມອບຖວາຍໝົດຕົວຕົນຂອງພວກເຂົາ ແລະ ໄດ້ປະຖິ້ມແນວຄິດໃດໆກ່ຽວກັບໂອກາດໃນອະນາຄົດຂອງພວກເຂົາເອງໄປແລ້ວ, ຊີວິດຂອງພວກເຂົາ, ສິ່ງທີ່ພວກເຂົາກິນ, ນຸ່ງຫົ່ມ ແລະ ນຳໃຊ້ ແລະ ບ່ອນທີ່ພວກເຂົາດຳລົງຊີວິດ. ຢ່າງທີສີ່, ພວກເຂົາຫິວ ແລະ ກະຫາຍຄວາມຊອບທຳຢູ່ຕະຫຼອດເວລາ ແລະ ພວກເຂົາເຊື່ອວ່າພວກເຂົາຂາດແຄນຫຼາຍເກີນໄປ ແລະ ພວກເຂົາຍັງມີວຸດທິພາວະທີ່ເດັກນ້ອຍເກີນໄປ. ຢ່າງທີຫ້າ, ດັ່ງທີ່ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ວ່າ ພວກເຂົາມີຊື່ສຽງທີ່ດີຢູ່ໃນໂລກ ແຕ່ໄດ້ຖືກໂຍນຖິ້ມໂດຍຄົນຂອງໂລກ. ໃນຄວາມສຳພັນຂອງພວກເຂົາກັບເພດກົງກັນຂ້າມ, ພວກເຂົາມີຄວາມຊື່ສັດດ້ານສິນທຳ. ທັງໝົດນີ້ແມ່ນຂໍ້ພິສູດ, ແຕ່ຕອນນີ້ເຮົາບໍ່ສາມາດເປີດເຜີຍພວກມັນໃຫ້ແກ່ພວກເຈົ້າຢ່າງຄົບຖ້ວນໄດ້ ເພາະວ່າພາລະກິດຂອງເຮົາຍັງບໍ່ທັນຮອດຂັ້ນຕອນນັ້ນເທື່ອ. ລູກຊາຍກົກເອີຍ ຈົ່ງຈື່ຈຳເອົາໄວ້! ຄວາມຮູ້ສຶກກ່ຽວກັບຊີວິດພາຍໃນຕົວເຈົ້າ, ຄວາມເຄົາລົບຂອງເຈົ້າທີ່ມີຕໍ່ເຮົາ, ຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາ, ຄວາມຮູ້ຂອງເຈົ້າກ່ຽວກັບເຮົາ, ການທີ່ເຈົ້າສະແຫວງຫາເຮົາ, ຄວາມເຊື່ອຂອງເຈົ້າ, ສິ່ງເຫຼົ່ານີ້ທັງໝົດຮວບຮວມເປັນຄວາມຮັກຂອງເຮົາທີ່ມີຕໍ່ພວກເຈົ້າ; ພວກມັນທັງໝົດແມ່ນຂໍ້ພິສູດທີ່ເຮົາໃຫ້ພວກເຈົ້າ ເພື່ອວ່າພວກເຈົ້າອາດຈະກາຍເປັນລູກຊາຍສຸດທີ່ຮັກຂອງເຮົາ

ແລະ ເປັນຄືກັນກັບເຮົາ ໂດຍກິນ, ດຳລົງຊີວິດ ແລະ ຊື່ນຊົມພອນຕ່າງໆຄຽງຂ້າງເຮົາໃນສະຫງ່າລາສີທີ່ບໍ່ມີໃຜທຽບເທົ່າ.

ເຮົາບໍ່ສາມາດສະແດງຄວາມຜ່ອນຜັນຕໍ່ຜູ້ທີ່ຂົ່ມເຫັງເຮົາ, ຕໍ່ຜູ້ທີ່ບໍ່ມີຄວາມຮູ້ໃດໆກ່ຽວກັບເຮົາ (ລວມເຖິງກ່ອນທີ່ຊື່ຂອງເຮົາຈະຖືກເປັນພະຍານເຖິງ), ຕໍ່ຜູ້ທີ່ເຊື່ອວ່າເຮົາເປັນມະນຸດ ຫຼື ຕໍ່ຜູ້ທີ່ໝິ່ນປະໝາດເຮົາ ແລະ ໃສ່ຮ້າຍເຮົາໃນອະດີດ. ເຖິງແມ່ນວ່າຕອນນີ້ພວກເຂົາຕ້ອງເປັນພະຍານທີ່ດັງກ້ອງກັງວານທີ່ສຸດໃຫ້ແກ່ເຮົາ, ມັນກໍຍັງບໍ່ປ່ຽນແປງ. ການຂົ່ມເຫັງເຮົາໃນອະດີດແມ່ນວິທີການໃຫ້ບໍລິການແກ່ເຮົາ ແລະ ຖ້າຄົນເຫຼົ່ານັ້ນຕ້ອງເປັນພະຍານໃຫ້ເຮົາໃນມື້ນີ້, ພວກເຂົາກໍຍັງຈະເປັນເຄື່ອງມືຂອງເຮົາຢູ່. ມີພຽງຜູ້ທີ່ຖືກເຮົາເຮັດໃຫ້ສົມບູນຢ່າງແທ້ຈິງໃນປັດຈຸບັນນີ້ເທົ່ານັ້ນທີ່ເປັນປະໂຫຍດແກ່ເຮົາ, ເພາະວ່າເຮົາແມ່ນພຣະເຈົ້າຜູ້ຊອບທຳເອງ ແລະ ເຮົາໄດ້ອອກມາຈາກເນື້ອໜັງ ແລະ ແຍກຕົວເຮົາອອກຈາກຄວາມສຳພັນທັງປວງທີ່ເປັນຂອງໆໂລກ. ເຮົາແມ່ນພຣະອົງເຈົ້າ ແລະ ທຸກຄົນ, ທຸກເລື່ອງ ແລະ ທຸກສິ່ງທີ່ເຄີຍຢູ່ອ້ອມຮອບຕົວເຮົາແມ່ນຢູ່ໃນມືຂອງເຮົາ. ເຮົາປາສະຈາກອາລົມ ແລະ ເຮົາປະຕິບັດຄວາມຊອບທຳກັບທຸກສິ່ງ. ເຮົາທ່ຽງກົງ ແລະ ບໍ່ໄດ້ມີມົນທິນກັບຄວາມສຶກກະປົກແມ່ນແຕ່ໜ້ອຍເລີຍ. ເຈົ້າເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາບໍ? ພວກເຈົ້າຍັງສາມາດບັນລຸສິ່ງນີ້ໄດ້ບໍ? ຜູ້ຄົນຄິດວ່າເຮົາກໍມີຄວາມເປັນມະນຸດທຳມະດາເຊັ່ນກັນ ແລະ ມີຄອບຄົວ ແລະ ມີຄວາມຮູ້ສຶກ, ແຕ່ພວກເຈົ້າຮູ້ບໍວ່າພວກເຈົ້າຜິດຢ່າງສິ້ນເຊີງ? ເຮົາແມ່ນພຣະເຈົ້າ! ພວກເຈົ້າລືມເລື່ອງນີ້ໄປແລ້ວບໍ? ເຈົ້າສັບສົນບໍ? ເຈົ້າຍັງບໍ່ຮູ້ຈັກເຮົາຊໍ້າ!

ຄວາມຊອບທຳຂອງເຮົາໄດ້ຖືກເປີດເຜີຍແກ່ພວກເຈົ້າຢ່າງສົມບູນ. ວິທີການໃດກໍຕາມທີ່ເຮົາຈັດການກັບຄົນປະເພດໃດໜຶ່ງເປີດເຜີຍໃຫ້ເຫັນທັງຄວາມຊອບທຳຂອງເຮົາ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາ. ຍ້ອນວ່າເຮົາແມ່ນພຣະເຈົ້າເອງ ຜູ້ນຳເອົາຄວາມໂກດຮ້າຍມາພ້ອມພຣະອົງ, ເຮົາຈະບໍ່ຍອມປ່ອຍແມ່ນແຕ່ຄົນດຽວທີ່ໄດ້ຂົ່ມເຫັງ ຫຼື ດູຖູກເຮົາ. ພາຍໃຕ້ຂໍ້ກຳນົດທີ່ເຂັ້ມງວດເຊັ່ນນີ້, ພວກເຈົ້າຮັບຮູ້ສິ່ງນີ້ບໍ? ບັນດາຜູ້ທີ່ເຮົາເລືອກ ແລະ ກຳນົດໄວ້ລ່ວງໜ້າເປັນຄືກັນກັບໄຂ່ມຸກທີ່ຫາຍາກ ຫຼື ຊິ້ນສ່ວນຂອງຫີນມະໂນຣາ; ພວກເຂົາມີໜ້ອຍ ແລະ ຫາໄດ້ຍາກຫຼາຍ. ນີ້ກໍຍ້ອນວ່າມີຈຳນວນຄົນທີ່ຈະປົກຄອງດັ່ງກະສັດໜ້ອຍກວ່າຄົນທີ່ຈະເປັນປະຊາຊົນຂອງເຮົາ ແລະ ນີ້ເປັນຫຼັກຖານເຖິງລິດອຳນາດຂອງເຮົາ ແລະ ການກະທຳອັນໜ້າອັດສະຈັນຂອງເຮົາ. ເຮົາມັກຈະເວົ້າວ່າເຮົາຈະໃຫ້ລາງວັນແກ່ພວກເຈົ້າ ແລະ ປະທານມົງກຸດໃຫ້ແກ່ພວກເຈົ້າ ແລະ ມີສະຫງ່າລາສີທີ່ບໍ່ສິ້ນສຸດໃນຕົວເຮົາ. ເມື່ອເວົ້າເຖິງລາງວັນ, ມົງກຸດ ແລະ ສະຫງ່າລາສີ, ເຮົາໝາຍເຖິງຫຍັງ? ຜູ້ຄົນຢູ່ພາຍໃຕ້ຄວາມຄິດທີ່ວ່າລາງວັນແມ່ນສິ່ງຂອງທາງວັດຖຸທີ່ສາມາດຈັບຕ້ອງໄດ້ ເຊັ່ນ: ອາຫານ, ເສື້ອຜ້າ ຫຼື ສິ່ງອື່ນໆທີ່ສາມາດນຳໃຊ້ໄດ້, ແຕ່ນີ້ເປັນວິທີການຄິດທີ່ຫຼົງສະໄໝໄປແລ້ວ; ມັນບໍ່ແມ່ນສິ່ງທີ່ເຮົາໝາຍເຖິງໂດຍຄຳເວົ້າເຫຼົ່ານັ້ນ ແລະ ກົງກັນຂ້າມກັບເປັນຄວາມເຂົ້າໃຈຜິດ. ລາງວັນແມ່ນສິ່ງທີ່ໄດ້ຮັບໃນຕອນນີ້ ແລະ ພວກມັນແມ່ນສ່ວນໜຶ່ງຂອງພຣະຄຸນ. ແນວໃດກໍຕາມ, ຍັງມີລາງວັນບາງຢ່າງທີ່ກ່ຽວຂ້ອງກັບຄວາມສຸກທາງຕັນຫາ ແລະ ຜູ້ທີ່ໃຫ້ບໍລິການແກ່ເຮົາ ແຕ່ເຮົາຈະບໍ່ຊ່ວຍໃຫ້ລອດພົ້ນນັ້ນ ກໍຍັງສາມາດໄດ້ຮັບຄວາມ

ສຸກທາງວັດຖຸດ້ວຍ (ເຖິງແມ່ນວ່າສິ່ງເຫຼົ່ານັ້ນພຽງແຕ່ເປັນສິ່ງຂອງທາງວັດຖຸທີ່ໃຫ້ບໍລິການແກ່ເຮົາເທົ່ານັ້ນ). ມົງກຸດບໍ່ແມ່ນການບົ່ງບອກເຖິງຕຳແໜ່ງ; ນັ້ນກໍຄື ມັນບໍ່ແມ່ນສິ່ງຂອງທາງວັດຖຸທີ່ເຮົາປະທານໃຫ້ພວກເຈົ້າເພື່ອວ່າພວກເຈົ້າອາດຈະຊື່ນຊົມກັບມັນ. ກົງກັນຂ້າມ, ມັນແມ່ນຊື່ໃໝ່ທີ່ເຮົາປະທານໃຫ້ແກ່ພວກເຈົ້າ ແລະ ໃຜກໍຕາມທີ່ສາມາດດຳລົງຊີວິດຕາມຊື່ໃໝ່ຂອງເຈົ້າຈະເປັນຄົນທີ່ໄດ້ຮັບມົງກຸດ ເຊິ່ງແມ່ນການໄດ້ຮັບພອນຂອງເຮົາ. ລາງວັນ ແລະ ມົງກຸດແມ່ນສ່ວນໜຶ່ງຂອງພອນ, ພວກມັນແຕກຕ່າງກັນຄືສະຫວັນ ແລະ ແຜ່ນດິນໂລກ. ສະຫງ່າລາສີພຽງແຕ່ບໍ່ສາມາດຖືກຈິນຕະນາການໄດ້ດ້ວຍແນວຄິດຂອງມະນຸດ ຍ້ອນວ່າສະຫງ່າລາສີບໍ່ແມ່ນສິ່ງຂອງທາງວັດຖຸ. ສຳລັບພວກເຂົາ, ມັນເປັນແນວຄວາມຄິດທີ່ເປັນນາມມະທຳທີ່ສຸດ. ແລ້ວສະຫງ່າລາສີແມ່ນຫຍັງກັນແທ້? ການເວົ້າວ່າພວກເຈົ້າຈະລົງມາດ້ວຍສະຫງ່າລາສີກັບເຮົານັ້ນໝາຍຄວາມວ່າແນວໃດ? ທັງໝົດຂອງເຮົາ ນັ້ນກໍຄືສິ່ງທີເຮົາເປັນ ແລະ ສິ່ງທີ່ເຮົາມີ, ຄວາມເມດຕາ ແລະ ຄວາມຮັກກະລຸນາ (ຕໍ່ລູກຊາຍຂອງເຮົາ) ແລະຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ, ການພິພາກສາ, ຄວາມໂກດຮ້າຍ, ການສາບແຊ່ງ ແລະການເຜົາໄໝ້ (ຕໍ່ທຸກຄົນ), ຕົວຕົນຂອງເຮົາແມ່ນສະຫງ່າລາສີ. ເປັນຫຍັງເຮົາຈຶ່ງກ່າວວ່າ ມີສະຫງ່າລາສີທີ່ບໍ່ສິ້ນສຸດຢູ່ໃນຕົວເຮົາ? ມັນກໍຍ້ອນວ່າ ມີສະຕິປັນຍາທີ່ບໍ່ສິ້ນສຸດໃນຕົວເຮົາ ພ້ອມທັງຄວາມອຸດົມສົມບູນທີ່ບໍ່ສາມາດປຽບທຽບໄດ້. ເພາະສະນັ້ນ, ການລົງມາດ້ວຍສະຫງ່າລາສີກັບເຮົາໝາຍຄວາມວ່າ ພວກເຈົ້າໄດ້ຖືກເຮົາເຮັດໃຫ້ສົມບູນແລ້ວ, ເຈົ້າມີສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີ, ເຈົ້າໄດ້ຖືກເຮົາເຮັດໃຫ້ສົມບູນແລ້ວ, ເຈົ້າຢຳເກງເຮົາ ແລະ ເຈົ້າບໍ່ຕໍ່ຕ້ານເຮົາ. ແນ່ນອນວ່າ ດຽວນີ້ ສິ່ງນີ້ຊັດເຈນສຳລັບເຈົ້າແລ້ວ!

ສະຖານະການທີ່ເຄັ່ງຄຽດຂອງທຸກຊົນຊາດເທິງແຜ່ນດິນໂລກໄດ້ເຖິງຈຸດສຸດຍອດແລ້ວ ແລະພວກເຂົາທຸກຄົນກຳລັງກຽມຕົວຢ່າງຕໍ່ເນື່ອງເພື່ອໃຫ້ບໍລິການແກ່ເຮົາ ແລະ ຍອມຮັບການເຜົາໄໝ້ທີ່ເຮົານຳມາສູ່ພວກເຂົາ. ເມື່ອຄວາມໂກດຮ້າຍ ແລະ ການເຜົາໄໝ້ຂອງເຮົາມາເຖິງ, ຈະບໍ່ມີຮ່ອງຮອຍລ່ວງໜ້າ. ແນວໃດກໍຕາມ, ເຮົາຮູ້ສິ່ງທີເຮົາກະທຳ ແລະ ເຮົາຊັດເຈນກ່ຽວກັບມັນຢ່າງແນ່ນອນ. ເຈົ້າຄວນແນ່ໃຈກັບພຣະທຳຂອງເຮົາ ແລະ ເຈົ້າຕ້ອງຝ້າວກຽມທຸກຢ່າງໃຫ້ພ້ອມ. ຈົ່ງກຽມພ້ອມທີ່ຈະລ້ຽງດູຜູ້ທີ່ມາສະແຫວງຫາຈາກຕ່າງປະເທດ. ຈົ່ງຈື່ສິ່ງນີ້ເອົາໄວ້! ປະເທດຈີນ, ນັ້ນກໍຄື ທຸກໆຄົນ ແລະທຸກແຫ່ງຫົນພາຍໃນປະເທດຈີນ ຢູ່ພາຍໃຕ້ຄຳສາບແຊ່ງຂອງເຮົາ. ເຈົ້າເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາບໍ?

# ບົດທີ 86

ຜູ້ຄົນເວົ້າວ່າເຮົາແມ່ນພຣະເຈົ້າຜູ້ມີຄວາມເມດຕາ; ພວກເຂົາເວົ້າວ່າເຮົາຈະນຳຄວາມລອດພົ້ນມາສູ່ທຸກສິ່ງທີ່ເຮົາສ້າງ. ສິ່ງເຫຼົ່ານີ້ລ້ວນຖືກກ່າວຕາມຄວາມຄິດຂອງມະນຸດ. ນັ້ນກໍຄື ເຮົາຄືພຣະເຈົ້າຜູ້ມີຄວາມເມດຕາ ແມ່ນເວົ້າເຖິງລູກຊາຍກົກຂອງເຮົາ ແລະ ເຮົາຈະນຳເອົາຄວາມລອດພົ້ນມາສູ່ທຸກສິ່ງທີ່ໄດ້ກ່າວໄວ້ກັບລູກຊາຍກົກ ແລະ ປະຊາຊົນຂອງເຮົາ. ຍ້ອນວ່າ ເຮົາຄືພຣະເຈົ້າທີ່ສະຫຼາດ, ມັນຊັດເຈນ, ໃນໃຈຂອງເຮົາ ແມ່ນໃຜທີ່ເຮົາຮັກ ແລະ ໃຜທີ່ເຮົາຊັງ. ສຳລັບບັນດາຜູ້ທີ່ເຮົາຮັກ, ເຮົາຈະຮັກເຂົາສະເໝີໄປຈົນເຖິງທີ່ສຸດ ແລະ ຄວາມຮັກນັ້ນຈະບໍ່ມີວັນປ່ຽນແປງ. ສຳລັບບັນດາຜູ້ທີ່ເຮົາຊັງ, ເຮົາຈະບໍ່ສົນໃຈແມ່ນແຕ່ໜ້ອຍດຽວ ບໍ່ວ່າເຂົາຈະປະພຶດດີປານໃດກໍຕາມ. ນີ້ກໍຍ້ອນວ່າພວກເຂົາບໍ່ໄດ້ເກີດມາຈາກເຮົາ ແລະ ບໍ່ໄດ້ມີຄຸນສົມບັດຂອງເຮົາ ຫຼື ຊີວິດຂອງເຮົາ. ເວົ້າອີກຢ່າງກໍຄື ພວກເຂົາບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າ ແລະ ບໍ່ໄດ້ຖືກເລືອກໂດຍເຮົາ ຍ້ອນວ່າເຮົາບໍ່ມີຄວາມຜິດພາດ. ນັ້ນກໍຄື ທຸກສິ່ງທີ່ເຮົາກະທຳນັ້ນເອີ້ນວ່າ ບໍລິສຸດ ແລະ ມີກຽດ, ເຮົາບໍ່ເຄີຍເສຍໃຈກັບສິ່ງນີ້ເລີຍ. ໃນສາຍຕາຂອງຄົນ ເຮົາອາດຂາດນໍ້າໃຈທີ່ສຸດ, ແຕ່ເຈົ້າບໍ່ຮູ້ບໍວ່າ ເຮົາເອງແມ່ນພຣະເຈົ້າຜູ້ທ່ຽງທຳ ແລະ ສະຫງ່າງາມ? ທຸກສິ່ງທີ່ເປັນຂອງເຮົານັ້ນຖືກຕ້ອງ; ແນ່ນອນວ່າ ບັນດາຜູ້ທີ່ເຮົາກຽດຊັງຈະໄດ້ຮັບຄຳສາບແຊ່ງຈາກເຮົາ ແລະ ສ່ວນບັນດາຜູ້ທີ່ເຮົາຮັກຈະໄດ້ພອນຈາກເຮົາຢ່າງແນ່ນອນ. ນີ້ຄືອຸປະນິໄສອັນບໍລິສຸດຂອງເຮົາ ແລະ ບໍ່ສາມາດຝ່າຝືນໄດ້ ແລະ ບໍ່ມີຜູ້ໃດຈະປ່ຽນແປງມັນໄດ້. ນີ້ແມ່ນແນ່ນອນ!

ມື້ນີ້, ບັນດາຜູ້ທີ່ສອດຄ່ອງກັບຄວາມປະສົງຂອງເຮົາຢ່າງແທ້ຈິງຈະຖືກເຮັດໃຫ້ສົມບູນແບບໂດຍເຮົາຢ່າງແນ່ນອນ ຍ້ອນວ່າ ພາລະກິດຂອງເຮົານັ້ນ ແມ່ນທັງກົງໄປກົງມາ ແລະ ລະອຽດຖີ່ຖ້ວນອີກດ້ວຍ ແລະ ເຮົາຈະບໍ່ປ່ອຍໃຫ້ມີຫຍັງຄ້າງຄາ. ບັນດາຜູ້ທີ່ເຮົາສາບແຊ່ງຈະຖືກເຜົາໄໝ້. ແລ້ວເປັນຫຍັງຄົນສ່ວນໃຫຍ່ທີ່ຖືກສາບແຊ່ງໂດຍເຮົາ ແຕ່ວ່າພຣະວິນຍານບໍລິສຸດກໍຍັງປະຕິບັດພາລະກິດຂອງພຣະອົງກັບພວກເຂົາຢູ່ (ນີ້ແມ່ນເວົ້າເຖິງເລື່ອງທີ່ເຮົາບໍ່ໄດ້ອາໄສຢູ່ໃນວິຫານສັກກະປົກບໍ)? ພວກເຈົ້າເຂົ້າໃຈຄວາມໝາຍແທ້ຈິງໃນເຫດຜົນທີ່ເວົ້າວ່າທຸກເລື່ອງ ແລະ ທຸກສິ່ງແມ່ນຮັບໃຊ້ພຣະຄຣິດບໍ? ພຣະວິນຍານບໍລິສຸດປະຕິບັດພາລະກິດຂອງພຣະອົງຜ່ານພວກເຂົາ ເມື່ອເຮົານຳໃຊ້ບໍລິການຂອງພວກເຂົາ ແຕ່ປົກກະຕິແລ້ວ ເມື່ອພວກເຂົາບໍ່ໄດ້ຢູ່ໃນການບໍລິການຂອງເຮົາ ໂດຍພື້ນຖານ ພວກເຂົາແມ່ນບໍ່ໄດ້ຮັບແສງສະຫວ່າງໃນຈິດວິນຍານຂອງພວກເຂົາ. ເຖິງແມ່ນວ່າພວກເຂົາຈະສະແຫວງຫາກໍຕາມ, ພວກເຂົາແມ່ນສະແຫວງຫາດ້ວຍຄວາມກະຕືລືລົ້ນ ແລະ ນີ້ແມ່ນເລ່ລ່ຽມຂອງຊາຕານ ເພາະວ່າໃນເວລາປົກກະຕິພວກເຂົາບໍ່ໄດ້ສົນໃຈພາລະກິດຂອງເຮົາເລີຍ ແລະ ພວກເຂົາກໍບໍ່ໄດ້ໃສ່ໃຈກ່ຽວກັບພາລະຂອງເຮົາແມ່ນແຕ່ໜ້ອຍດຽວ. ບັດນີ້ ລູກຊາຍກົກຂອງເຮົາເຕີບໃຫຍ່ແລ້ວ, ເຮົາຈຶ່ງໄລ່ພວກເຂົາອອກໄປ; ຍ້ອນສາເຫດນີ້ ພຣະວິນຍານຂອງເຮົາຈຶ່ງຖອນຕົວອອກຈາກທຸກບ່ອນ ແລະ ທຸກສິ່ງໄດ້ເໜັ້ນໜັກເປັນພິເສດກັບລູກຊາຍກົກຂອງເຮົາ. ເຂົ້າໃຈບໍ? ທຸກສິ່ງຂຶ້ນຢູ່ກັບການກະທຳຂອງເຮົາ, ຂຶ້ນຢູ່ກັບການກຳນົດລ່ວງໜ້າຂອງເຮົາ ແລະ ຂຶ້ນຢູ່ກັບທຸກພຣະທຳທີ່ກ່າວອອກຈາກປາກຂອງເຮົາ. ທຸກແຫ່ງຫົນທີ່ໄດ້ຮັບ

ພອນຂອງເຮົາແມ່ນຕ້ອງຂຶ້ນຢູ່ກັບການກະທຳພາລະກິດຂອງເຮົາ ແລະ ຂຶ້ນຢູ່ກັບການດຳເນີນພາລະກິດຂອງເຮົາ. ປະເທດຈີນແມ່ນປະເທດທີ່ຊາຕານໄດ້ຮັບການບູຊາຫຼາຍທີ່ສຸດ ດັ່ງນັ້ນ ມັນຈຶ່ງຖືກເຮົາສາບແຊ່ງ. ຍິ່ງໄປກວ່ານັ້ນ ມັນຍັງເປັນປະເທດທີ່ໄດ້ປະຕິບັດການຂົ່ມເຫັງເຮົາຫຼາຍທີ່ສຸດອີກດ້ວຍ. ເຮົາຈະບໍ່ປະຕິບັດພາລະກິດຂອງເຮົາກັບຜູ້ຄົນທີ່ຢູ່ພາຍໃຕ້ອິດທິພົນຂອງມັງກອນແດງຜູ້ຍິ່ງໃຫຍ່ຢ່າງແນ່ນອນ. ເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳເຮົາບໍ? ຄວາມຈິງແລ້ວ ຈຳນວນລູກຊາຍກົກ ແລະ ປະຊາຊົນຂອງເຮົານັ້ນມີໜ້ອຍຫຼາຍ. ແນ່ນອນວ່າທຸກສິ່ງແມ່ນຢູ່ໃນກຳມືຂອງເຮົາ; ຄວນສຸມກຳລັງ ແລະ ໃຊ້ຄວາມພະຍາຍາມຫຼາຍຂຶ້ນກັບຜູ້ທີ່ເຮົາໄດ້ເລືອກໄວ້ ແລະ ກຳນົດໄວ້ລ່ວງໜ້າແລ້ວ. ເວົ້າອີກຢ່າງກໍຄື ບັນດາຜູ້ທີ່ເປັນລູກຊາຍກົກຂອງເຮົາຄວນຝຶກຝົນໂດຍໄວເພື່ອວ່າ ພວກເຂົາຈະສາມາດແບ່ງປັນພາລະຂອງເຮົາໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້ ແລະ ອຸທິດທຸກຄວາມພະຍາຍາມເຂົ້າໃນພາລະກິດຂອງເຮົາ.

ບັນດາພວກເຈົ້າຜູ້ທີ່ບໍລິການເຮົາ, ຈົ່ງຟັງເຖີດ! ພວກເຈົ້າສາມາດໄດ້ຮັບບາງພຣະຄຸນຂອງເຮົາເມື່ອເຈົ້າບໍລິການເຮົາ. ນັ້ນກໍຄື ພວກເຈົ້າຈະຮູ້ພຽງຊື່ວຄາວກ່ຽວກັບພາລະກິດຂອງເຮົາໃນຕໍ່ໜ້າ ແລະ ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ, ແຕ່ແນ່ນອນວ່າ ພວກເຈົ້າຈະບໍ່ມີຄວາມສຸກກັບມັນ. ນີ້ຄືພຣະຄຸນຂອງເຮົາ. ເມື່ອການບໍລິການຂອງເຈົ້າສຳເລັດແລ້ວ, ຈົ່ງອອກໄປທັນທີ ແລະ ຢ່າລໍຊ້າ. ບັນດາພວກເຈົ້າຜູ້ທີ່ເປັນລູກຊາຍກົກຂອງເຮົາບໍ່ຄວນອວດດີ ແຕ່ພວກເຈົ້າອະນຸຍາດໃຫ້ພູມໃຈໄດ້ ຍ້ອນວ່າເຮົາໄດ້ປະທານພອນອັນບໍ່ມີວັນສິ້ນສຸດໃຫ້ແກ່ພວກເຈົ້າແລ້ວ. ບັນດາພວກເຈົ້າຜູ້ທີ່ເປັນເປົ້າໝາຍຂອງການທຳລາຍລ້າງບໍ່ຄວນສ້າງຄວາມເດືອດຮ້ອນໃຫ້ກັບຕົວເອງ ຫຼື ຮູ້ສຶກເສົ້າໂສກເສຍໃຈກັບໂຊກຊະຕາຂອງຕົນ. ເຈົ້າບໍ່ແມ່ນລູກຫຼານຂອງຊາຕານ? ພາຍຫຼັງທີ່ເຈົ້າໄດ້ບໍລິການເຮົາແລ້ວ ເຈົ້າອາດຈະກັບໄປຢູ່ຂຸມເລິກຍ້ອນວ່າ ເຈົ້າບໍ່ມີປະໂຫຍດກັບເຮົາອີກຕໍ່ໄປ. ຫຼັງຈາກນັ້ນ ເຮົາຈະເລີ່ມຈັດການກັບເຈົ້າດ້ວຍການຂ້ຽນຕີຂອງເຮົາ. ເມື່ອເຮົາເລີ່ມເຮັດພາລະກິດ ເຮົາກໍຈະຕິດຕາມຈົນເຖິງທີ່ສຸດ; ການກະທຳຂອງເຮົາຈະຖືກເຮັດໃຫ້ສຳເລັດ ແລະ ຜົນສຳເລັດຂອງເຮົາຈະຄົງຢູ່ຕະຫຼອດໄປ. ສິ່ງທັງໝົດນີ້ແມ່ນໃຊ້ໄດ້ກັບລູກຊາຍກົກຂອງເຮົາ, ລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາ ແລະ ມັນໃຊ້ໄດ້ກັບພວກເຈົ້າເຊັ່ນດຽວກັນ: ການຕີສອນຂອງເຮົາທີ່ມີຕໍ່ພວກເຈົ້າຈະຄົງຢູ່ຕະຫຼອດໄປເປັນນິດ. ກ່ອນໜ້ານີ້ ເຮົາເຄີຍໄດ້ບອກພວກເຈົ້າຫຼາຍເທື່ອແລ້ວວ່າ ຄົນຊົ່ວທີ່ຕໍ່ຕ້ານເຮົາຈະຖືກເຮົາຕີສອນຢ່າງແນ່ນອນ. ຖ້າເຈົ້າບໍ່ໄດ້ຖືກປະນາມໂດຍພຣະວິນຍານບໍລິສຸດຫຼັງຈາກເຈົ້າຕໍ່ຕ້ານເຮົາ ແລ້ວເຈົ້າແມ່ນໄດ້ຖືກສາບແຊ່ງແລ້ວ ແລະ ຫຼັງຈາກນັ້ນກໍຈະຖືກຕີລົງດ້ວຍມືຂອງເຮົາ. ຖ້າເຈົ້າໄດ້ຖືກລົງວິໄນຈາກພຣະວິນຍານບໍລິສຸດໃນຂະນະທີ່ເຈົ້າມີຄວາມຄິດບໍ່ດີກ່ຽວກັບເຮົາ, ເຈົ້າກໍໄດ້ຮັບພອນຂອງເຮົາແລ້ວ; ແນວໃດກໍຕາມ, ເຈົ້າຕ້ອງລະມັດລະວັງຢູ່ສະເໝີ, ຢ່າລະເລີຍ ແລະ ຢ່າປະໝາດ.

# ບົດທີ 87

ເຈົ້າຕ້ອງກ້າວໂດຍໄວ ແລະ ເຮັດສິ່ງທີ່ເຮົາຕ້ອງການເຮັດສຳເລັດ. ນີ້ແມ່ນຄວາມປະສົງອັນແຮງກ້າຂອງເຮົາຕໍ່ພວກເຈົ້າ. ເປັນໄປໄດ້ບໍວ່າ ແມ່ນແຕ່ຕອນນີ້ ພວກເຈົ້າກໍຍັງບໍ່ທັນເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາ? ເປັນໄປໄດ້ບໍທີ່ເຈົ້າຍັງບໍ່ຮູ້ເຈດຕະນາຂອງເຮົາ? ເຮົາໄດ້ເວົ້າຊັດເຈນຂຶ້ນ ແລະ ໄດ້ເວົ້າຫຼາຍຂຶ້ນ ແລະ ຫຼາຍຂຶ້ນ ແຕ່ພວກເຈົ້າຍັງບໍ່ໄດ້ພະຍາຍາມເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາເລີຍບໍ? ຊາຕານເອີຍ, ຢ່າຄິດວ່າ ເຈົ້າຈະສາມາດທຳລາຍແຜນການຂອງເຮົາໄດ້! ຜູ້ທີ່ເຮັດການບໍລິການໃຫ້ຊາຕານ ກໍຄືລູກຫຼານຂອງຊາຕານ (ນີ້ໝາຍເຖິງຜູ້ທີ່ຖືກຊາຕານຄອບງຳ. ສະນັ້ນ ຜູ້ທີ່ຖືກຊາຕານຄອບງຳຈະມີຊີວິດຂອງຊາຕານຢ່າງແນ່ນອນ ແລະ ດ້ວຍເຫດນັ້ນຈຶ່ງຖືກເອີ້ນວ່າ ເປັນລູກຫຼານຂອງຊາຕານ) ຂາບຕີນເຮົາວິງວອນຮ້ອງຂໍຄວາມເມດຕາ, ຮ້ອງໄຫ້ ແລະ ກັດແຂ້ວຂອງພວກເຂົາ. ແນວໃດກໍຕາມ ເຮົາຈະບໍ່ເຮັດໃນສິ່ງທີ່ໂງ່ຈ້າເຊັ່ນນັ້ນ! ເຮົາສາມາດໃຫ້ອະໄພໃຫ້ຊາຕານໄດ້ບໍ? ເຮົາສາມາດນຳເອົາຄວາມລອດພົ້ນມາສູ່ຊາຕານໄດ້ບໍ? ມັນເປັນໄປບໍ່ໄດ້! ເຮົາເຮັດໃນສິ່ງທີ່ເຮົາເວົ້າ ແລະ ເຮົາບໍ່ເຄີຍເສຍໃຈເລີຍ!

ແມ່ນຫຍັງກໍຕາມທີ່ເຮົາເວົ້າຈະກາຍເປັນຈິງ, ບໍ່ແມ່ນບໍ? ປານນັ້ນກໍ່ດີ, ພວກເຈົ້າກໍຍັງບໍ່ໄວ້ວາງໃຈເຮົາ, ສົງໄສພຣະທຳຂອງເຮົາ ແລະ ຄິດວ່າເຮົາກຳລັງເວົ້າຫຼິ້ນກັບພວກເຈົ້າຢູ່. ຈັ່ງແມ່ນເປັນຕາຫົວຂວັນແທ້ໆ. ເຮົາຄືພຣະເຈົ້າ! ເຈົ້າເຂົ້າໃຈບໍ? ເຮົາຄືພຣະເຈົ້າ! ຖ້າເຮົາບໍ່ມີສະຕິປັນຍາ ແລະ ອຳນາດ, ເຮົາຈະສາມາດເຮັດ ແລະ ເວົ້າຕາມໃຈເຮົາໄດ້ບໍ? ແຕ່ເຈົ້າຍັງບໍ່ໄວ້ວາງໃຈເຮົາ. ເຮົາໄດ້ເນັ້ນສິ່ງເຫຼົ່ານີ້ກັບພວກເຈົ້າຊໍ້າແລ້ວຊໍ້າອີກ ແລະ ເຮົາໄດ້ບອກພວກເຈົ້າກ່ຽວກັບພວກມັນຊໍ້າແລ້ວຊໍ້າອີກ. ເປັນຫຍັງພວກເຈົ້າສ່ວນໃຫຍ່ຈຶ່ງຍັງບໍ່ເຊື່ອ? ເປັນຫຍັງເຈົ້າຍັງມີຄວາມສົງໄສຢູ່? ເປັນຫຍັງເຈົ້າຈຶ່ງຍຶດຕິດຢ່າງສິ້ນຫວັງກັບແນວຄວາມຄິດຂອງຕົນເອງ? ພວກມັນສາມາດຊ່ວຍເຈົ້າໄດ້ບໍ? ເຮົາເຮັດໃນສິ່ງທີ່ເຮົາເວົ້າ. ເຮົາໄດ້ບອກພວກເຈົ້າຫຼາຍເທື່ອແລ້ວ: ຈົ່ງຖືເອົາພຣະທຳຂອງເຮົາເປັນຄວາມຈິງ ແລະ ຈົ່ງຢ່າມີຄວາມສົງໄສ. ພວກເຈົ້າບໍ່ໄດ້ຖືເອົາພຣະທຳຂອງເຮົາຢ່າງຈິງຈັງບໍ? ເຈົ້າບໍ່ສາມາດເຮັດຫຍັງໄດ້ດ້ວຍຕົນເອງ ແຕ່ເຈົ້າກໍບໍ່ສາມາດເຊື່ອໃນສິ່ງທີ່ເຮົາເຮັດ. ສາມາດເວົ້າຫຍັງໄດ້ແດ່ກ່ຽວກັບຄົນເຊັ່ນນີ້? ເວົ້າແບບກົງໄປກົງມາ, ມັນເບິ່ງຄືກັບວ່າ ເຮົາບໍ່ເຄີຍສ້າງພວກເຈົ້າ. ເວົ້າອີກຢ່າງໜຶ່ງກໍຄື ເຈົ້າບໍ່ມີຄຸນສົມບັດໃນທຸກດ້ານ ໃນການເປັນຜູ້ໃຫ້ບໍລິການແກ່ເຮົາ. ທຸກຄົນຕ້ອງເຊື່ອໃນພຣະທຳຂອງເຮົາ! ທຸກຄົນຕ້ອງຜ່ານການທົດສອບ. ເຮົາຈະບໍ່ໃຫ້ຜູ້ໃດຜ່ານໄປໄດ້. ແນ່ນອນ ຜູ້ທີ່ມີຄວາມເຊື່ອແມ່ນໄດ້ຮັບການຍົກເວັ້ນ. ຄົນທີ່ເຊື່ອໝັ້ນໃນພຣະທຳຂອງເຮົາຈະໄດ້ຮັບພອນຂອງເຮົາຢ່າງແນ່ນອນ ເຊິ່ງຈະຖືກມອບໃຫ້ເຈົ້າ ແລະ ເຮັດໃຫ້ສຳເລັດໃນຕົວເຈົ້າຕາມສິ່ງທີ່ເຈົ້າເຊື່ອ. ບັນດາລູກຊາຍກົກຂອງເຮົາເອີຍ! ຕອນນີ້ເຮົາຈະເລີ່ມໃຫ້ພອນທັງໝົດຂອງເຮົາແກ່ພວກເຈົ້າ. ພວກເຈົ້າຈະເລີ່ມປະຖິ້ມສິ່ງທີ່ຍຶດຕິດກັບເນື້ອໜັງທີ່ເປັນຕາກຽດຊັງເທື່ອລະໜ້ອຍເຊັ່ນ: ການແຕ່ງດອງ, ຄອບຄົວ, ການກິນ, ການນຸ່ງຫົ່ມ, ການນອນ ແລະ ໄພພິບັດທາງທຳມະຊາດທັງໝົດ (ລົມ, ແດດ, ຝົນ, ລົມໜາວຈັດ, ຄວາມທຸກທໍລະມານຈາກ

ຫິມະຕົກ ແລະ ສິ່ງອື່ນໆທັງໝົດທີ່ພວກເຈົ້າກຽດຊັງ). ພວກເຈົ້າຈະເດີນທາງທາງທະເລ, ທາງບົກ ແລະ ທາງອາກາດໂດຍບໍ່ໄດ້ຖືກກະທົບຈາກຂໍ້ຈໍາກັດຂອງພື້ນທີ່, ເວລາ ຫຼື ພູມສາດ. ພວກເຈົ້າຈະມີຄວາມສຸກຢ່າງເບີກບານໃນອ້ອມກອດດ້ວຍຄວາມຮັກຂອງເຮົາ ແລະ ຮັບຜິດຊອບທຸກສິ່ງທີ່ຢູ່ພາຍໃຕ້ການເບິ່ງແຍງດ້ວຍຄວາມຮັກຂອງເຮົາ.

ແມ່ນໃຜທີ່ຈະບໍ່ຮູ້ສຶກພາກພູມໃຈກັບບັນດາລູກຊາຍກົກທີ່ເຮົາໄດ້ເຮັດໃຫ້ສົມບູນ? ແມ່ນໃຜທີ່ຈະບໍ່ສັນລະເສີນຊື່ຂອງເຮົາເພາະເຫັນແກ່ພວກເຂົາ? ເປັນຫຍັງຕອນນີ້ເຮົາຈຶ່ງປາຖະໜາຢາກເປີດເຜີຍຄວາມລຶກລັບຫຼາຍຢ່າງໃຫ້ພວກເຈົ້າເບິ່ງ? ເປັນຫຍັງຈິ່ງເປີດເຜີຍຕອນນີ້ ແຕ່ບໍ່ເປີດເຜີຍໃນອະດີດ? ເຈົ້າຮູ້ບໍວ່າ ສິ່ງນີ້ກໍຍັງເປັນສິ່ງລຶກລັບໃນຕົວຂອງມັນເອງເຊັ່ນກັນ? ເປັນຫຍັງເຮົາຈິ່ງບໍ່ເວົ້າວ່າ ໃນອະດີດປະເທດຈີນແມ່ນຊາດທີ່ເຮົາໄດ້ສາບແຊ່ງ? ເປັນຫຍັງເຮົາບໍ່ໄດ້ເປີດເຜີຍຜູ້ທີ່ໃຫ້ບໍລິການແກ່ເຮົາ? ໃນປັດຈຸບັນເຮົາຍັງຈະບອກພວກເຈົ້າສິ່ງນີ້ເຊັ່ນກັນຄື: ຕາມທັດສະນະຂອງເຮົາ, ປັດຈຸບັນນີ້ທຸກສິ່ງທຸກຢ່າງແມ່ນຖືກເຮັດໃຫ້ສໍາເລັດແລ້ວ ແລະ ເຮົາເວົ້າສິ່ງນີ້ເນື່ອງຈາກບັນດາລູກຊາຍກົກຂອງເຮົາ (ເນື່ອງຈາກວ່າ ໃນປັດຈຸບັນ ບັນດາລູກຊາຍກົກຂອງເຮົາໄດ້ປົກຄອງຄຽງຂ້າງເຮົາ ໂດຍບໍ່ແມ່ນມີແຕ່ຮູບຊົງເທົ່ານັ້ນ ແຕ່ທີ່ຈິງແລ້ວແມ່ນປົກຄອງພ້ອມກັນກັບເຮົາ. ຕອນນີ້ ບັນດາຜູ້ທີ່ພຣະວິນຍານບໍລິສຸດເຮັດພາລະກິດໃນຕົວເຂົາ ຈະປົກຄອງຄຽງຂ້າງເຮົາຢ່າງແນ່ນອນ ແລະ ສິ່ງດັ່ງກ່າວນີ້ແມ່ນຖືກເປີດເຜີຍຕອນນີ້ ແລະ ບໍ່ແມ່ນມື້ວານນີ້ ຫຼື ມື້ອື່ນ). ໃນປັດຈຸບັນ ເຮົາເປີດເຜີຍຄວາມລຶກລັບທັງໝົດຂອງເຮົາກ່ຽວກັບຄວາມເປັນມະນຸດທໍາມະດາ ເພາະວ່າ ຄົນເຫຼົ່ານີ້ ທີ່ເຮົາຕ້ອງການເປີດເຜີຍ ແມ່ນໄດ້ຖືກເປີດເຜີຍແລ້ວ ແລະ ນີ້ຄືສະຕິປັນຍາຂອງເຮົາ. ພາລະກິດຂອງເຮົາໄດ້ຄືບໜ້າມາເຖິງຂັ້ນຕອນນີ້ແລ້ວ: ນັ້ນກໍຄື ໃນຊ່ວງເວລານີ້ ເຮົາຕ້ອງຈັດຕັ້ງປະຕິບັດແຜນການແຫ່ງພຣະດໍາລັດການປົກຄອງ ທີ່ເຮົາໄດ້ກໍານົດເປັນພິເສດສໍາລັບຊ່ວງເວລານີ້. ດັ່ງນັ້ນ, ເຮົາຈຶ່ງມອບການຢັ້ງຢືນທີ່ເໝາະສົມແກ່ບັນດາລູກຊາຍກົກຂອງເຮົາ, ບັນດາລູກຊາຍ, ຜູ້ຄົນ ແລະ ຜູ້ທີ່ໃຫ້ບໍລິການ ເພາະວ່າ ເຮົາມີສິດອໍານາດ ແລະ ເຮົາຈະພິພາກສາ ແລະ ເຮົາຈະປົກຄອງດ້ວຍຄ້ອນເຫຼັກ. ແມ່ນໃຜກ້າທີ່ຈະບໍ່ເຮັດການບໍລິການໃຫ້ແກ່ເຮົາດ້ວຍຄວາມເຊື່ອຟັງ? ແມ່ນໃຜກ້າຈົ່ມໃຫ້ເຮົາ? ແມ່ນໃຜກ້າເວົ້າວ່າ ເຮົາບໍ່ແມ່ນພຣະເຈົ້າແຫ່ງຄວາມຊອບທໍາ? ເຮົາຮູ້ວ່າ ທາດແທ້ພິສາດຂອງພວກເຈົ້າແມ່ນຖືກເປີດເຜີຍຕໍ່ໜ້າເຮົາແຕ່ດົນແລ້ວ: ພວກເຈົ້າຮູ້ສຶກອິດສາ ແລະ ຊັງຜູ້ໃດກໍຕາມທີ່ເຮົາດີນໍາ. ນີ້ແມ່ນທໍາມະຊາດຂອງຊາຕານແທ້ໆ! ເຮົາດີຕໍ່ບັນດາລູກຊາຍຂອງເຮົາ. ເຈົ້າກ້າເວົ້າວ່າ ເຮົາບໍ່ຊອບທໍາບໍ? ເຮົາສາມາດຂັບໄລ່ເຈົ້າອອກແທ້ໆໃດ. ແຕ່ໂຊກດີທີ່ເຈົ້າເຮັດການບໍລິການໃຫ້ແກ່ເຮົາ ແລະ ຕອນນີ້ກໍບໍ່ແມ່ນເວລາເທື່ອ; ບໍ່ດັ່ງນັ້ນ ເຮົາຈະຂັບໄລ່ເຈົ້າອອກ!

ຕະກູນຂອງຊາຕານເອີຍ! ຈົ່ງຢຸດປ່າເຖື່ອນໄດ້ແລ້ວ! ຈົ່ງຢຸດເວົ້າ! ຈົ່ງຢຸດກະທໍາ! ພາລະກິດຂອງເຮົາແມ່ນໄດ້ເລີ່ມດໍາເນີນໃນບັນດາລູກຊາຍ ແລະ ຜູ້ຄົນທີ່ຖືກເລືອກຂອງເຮົາ ແລະ ໄດ້ແຜ່ຂະຫຍາຍໄປທົ່ວທຸກຊາດ, ທຸກນິກາຍ, ທຸກສາສະໜາ ແລະ ຜູ້ຄົນທຸກສາຂາອາຊີບທີ່ຢູ່ນອກປະເທດຈີນ. ເປັນຫຍັງຜູ້ທີ່ເຮັດການບໍລິການໃຫ້ແກ່ເຮົາຕ້ອງຖືກກີດກັນດ້ານຈິດວິນຍານສະເໝີ? ເປັນຫຍັງພວກເຂົາບໍ່

ເຄີຍເຂົ້າໃຈເລື່ອງຕ່າງໆທາງຝ່າຍວິນຍານ? ເປັນຫຍັງຄືວ່າ ພຣະວິນຍານຂອງເຮົາຈຶ່ງບໍ່ເຄີຍປະຕິບັດພາລະກິດໃນຜູ້ຄົນເຫຼົ່ານີ້? ໂດຍທົ່ວໄປແລ້ວ ເຮົາບໍ່ສາມາດໃຊ້ຄວາມພະຍາຍາມຫຼາຍກັບຜູ້ທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ ຫຼື ເລືອກໄວ້. ຄວາມທຸກທໍລະມານທັງໝົດທີ່ຜ່ານມາຂອງເຮົາ, ການດູແລ ແລະ ຄວາມພະຍາມຢ່າງພາກພຽນທັງໝົດຂອງເຮົາ ແມ່ນມີໄວ້ສຳລັບບັນດາລູກຊາຍກົກຂອງເຮົາ, ບັນດາລູກຊາຍ ແລະ ຜູ້ຄົນຈຳນວນເລັກນ້ອຍ ແລະ ຍິ່ງໄປກວ່ານັ້ນ ເຮົາໄດ້ເຮັດສິ່ງເຫຼົ່ານີ້ ເພື່ອວ່າພາລະກິດໃນອະນາຄົດຂອງເຮົາຈະສາມາດສຳເລັດລົງໄດ້ໂດຍບໍ່ມີຂໍ້ຫຍຸ້ງຍາກ ແລະ ເພື່ອວ່າຄວາມປະສົງຂອງເຮົາຈະບໍ່ຖືກຂັດຂວາງ. ຍ້ອນວ່າ ເຮົາແມ່ນພຣະເຈົ້າທີ່ສະຫຼາດ, ເຮົາຈຶ່ງໄດ້ຈັດແຈງທຸກຂັ້ນຕອນຢ່າງຖືກຕ້ອງ. ເຮົາບໍ່ພະຍາຍາມເກັບຮັກສາຄົນໄວ້ (ນີ້ແມ່ນແນໃສ່ຜູ້ທີ່ບໍ່ໄດ້ຖືກເລືອກ ຫຼື ກຳນົດໄວ້ລ່ວງໜ້າ) ຫຼື ເຮົາບໍ່ໂຈມຕີຄົນໃດຄົນໜຶ່ງໂດຍບໍ່ໃສ່ໃຈ (ນີ້ແມ່ນແນໃສ່ຜູ້ທີ່ຖືກເລືອກ ຫຼື ກຳນົດໄວ້ລ່ວງໜ້າ): ນີ້ແມ່ນພຣະດຳລັດຂອງເຮົາ ເຊິ່ງບໍ່ມີໃຜສາມາດປ່ຽນແປງໄດ້! ເຮົາໂຫດຮ້າຍຕໍ່ຜູ້ທີ່ເຮົາກຽດຊັງ; ເຮົາດູແລ ແລະ ປົກປ້ອງຜູ້ທີ່ເຮົາຮັກ. ສະນັ້ນ, ເຮົາເຮັດໃນສິ່ງທີ່ເຮົາເວົ້າ (ຜູ້ທີ່ເຮົາເລືອກແມ່ນຜູ້ທີ່ຖືກເລືອກ; ຜູ້ທີ່ເຮົາກຳນົດໄວ້ລ່ວງໜ້າແມ່ນຜູ້ທີ່ຖືກກຳນົດໄວ້ລ່ວງໜ້າ; ນີ້ແມ່ນພາລະກິດຂອງເຮົາ ທີ່ເຮົາໄດ້ຈັດແຈງໄວ້ກ່ອນການຊົງສ້າງ).

ແມ່ນໃຜສາມາດປ່ຽນແປງໃຈຂອງເຮົາໄດ້? ນອກຈາກການປະຕິບັດຂອງເຮົາ ທີ່ເຮັດຕາມແຜນການ ທີ່ເຮົາເຮັດຂຶ້ນຕາມທີ່ເຮົາປາດຖະໜາ, ແມ່ນໃຜທີ່ກ້າເຮັດດ້ວຍຄວາມປະໝາດ ແລະ ບໍ່ເຊື່ອຟັງຄຳສັ່ງຂອງເຮົາ? ສິ່ງເຫຼົ່ານີ້ແມ່ນພຣະດຳລັດທັງໝົດຂອງເຮົາ ແລະ ມີໃຜທີ່ກ້າລຶບລ້າງພຣະດຳລັດແມ່ນແຕ່ຂໍ້ດຽວອອກຈາກເຮົາ? ທຸກຢ່າງແມ່ນຕ້ອງຢູ່ພາຍໃຕ້ການບັນຊາຂອງເຮົາ. ບາງຄົນເວົ້າວ່າຄົນໃດໜຶ່ງໄດ້ທົນທຸກຫຼາຍແລ້ວ ແລະ ເປັນຄົນທີ່ສັດຊື່ ແລະ ຄຳນຶງເຖິງຈິດໃຈຂອງເຮົາດ້ວຍຄວາມບໍລິສຸດ. ແຕ່ເປັນຫຍັງເຮົາຈຶ່ງບໍ່ເລືອກຄົນນັ້ນ? ນີ້ກໍແມ່ນພຣະດຳລັດຂອງເຮົາເຊັ່ນກັນ. ຖ້າເຮົາເວົ້າວ່າມີບາງຄົນທີ່ສອດຄ່ອງກັບເຈດຕະນາຂອງເຮົາ ຄົນຜູ້ນັ້ນກໍສອດຄ່ອງກັບເຈດຕະນາຂອງເຮົາ ແລະ ແມ່ນຜູ້ທີ່ເຮົາຮັກ; ຖ້າເຮົາເວົ້າວ່າ ບາງຄົນແມ່ນລູກຂອງຊາຕານ ຄົນນັ້ນກໍແມ່ນຄົນທີ່ເຮົາກຽດຊັງ. ຢ່າປະຈົບປະແຈງຄົນອື່ນ! ເຈົ້າສາມາດເບິ່ງຄົນນັ້ນອອກແທ້ບໍ? ເຮົາຕັດສິນສິ່ງເຫຼົ່ານີ້ທັງໝົດ. ລູກຊາຍກໍຈະເປັນລູກຊາຍຢູ່ສະເໝີ ແລະ ຊາຕານກໍຈະເປັນຊາຕານສະເໝີໄປ ເຊິ່ງເວົ້າອີກຢ່າງໜຶ່ງກໍຄືທຳມະຊາດຂອງມະນຸດແມ່ນບໍ່ໄດ້ປ່ຽນແປງ. ນອກຈາກວ່າ ເຮົາເຮັດໃຫ້ພວກມັນປ່ຽນແປງ ທຸກຄົນກໍຈະເຮັດຕາມຄົນປະເພດດຽວກັນກັບພວກເຂົາ ແລະ ຈະບໍ່ສາມາດປ່ຽນແປງໄດ້!

ເຮົາເປີດເຜີຍຄວາມລຶກລັບຂອງເຮົາຕໍ່ພວກເຈົ້າໃນຂະນະທີ່ພາລະກິດຂອງເຮົາຄືບໜ້າ. ແທ້ຈິງແລ້ວ ພວກເຈົ້າຮູ້ບໍ່ວ່າພາລະກິດຂອງເຮົາໄດ້ຄືບໜ້າໄປຮອດຂັ້ນຕອນໃດແລ້ວ? ເຈົ້າຈະເຮັດຕາມການນຳພາຂອງພຣະວິນຍານຂອງເຮົາ ເພື່ອເຮັດໃນສິ່ງທີ່ເຮົາເຮັດ ແລະ ເວົ້າໃນສິ່ງທີ່ເຮົາເວົ້າໄດ້ແທ້ບໍ? ເປັນຫຍັງເຮົາຈຶ່ງເວົ້າວ່າ ປະເທດຈີນແມ່ນຊາດທີ່ເຮົາໄດ້ສາບແຊ່ງ? ກ່ອນອື່ນໝົດ ເຮົາໄດ້ສ້າງຄົນຈີນໃນປັດຈຸບັນໃນມະໂນພາບຂອງເຮົາ. ພວກເຂົາບໍ່ມີວິນຍານ ແລະ ໃນເບື້ອງຕົ້ນ ພວກເຂົາຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ດ້ວຍເຫດນັ້ນ ເຮົາຈຶ່ງໃຈຮ້າຍກັບຄົນເຫຼົ່ານີ້

ແລະ ໄດ້ສາບແຊ່ງພວກເຂົາ. ເຮົາຊັງຄົນເຫຼົ່ານີ້ຫຼາຍທີ່ສຸດ ແລະ ເຮົາໃຈຮ້າຍເວລາມີການກ່າວເຖິງພວກເຂົາ ເພາະພວກເຂົາແມ່ນລູກໆຂອງມັງກອນແດງຜູ້ຍິ່ງໃຫຍ່. ເລື່ອງນີ້ເຮັດໃຫ້ຄົນເຮົາລະນຶກເຖິງຍຸກທີ່ບັນດາປະເທດຕ່າງໆໃນໂລກພະນອກປະເທດຈີນເຂົ້າເປັນປະເທດດຽວກັນ. ປັດຈຸບັນນີ້ກໍຍັງຄືເກົ່າ ແລະ ມັນເປັນການສາບແຊ່ງຂອງເຮົາທັງໝົດ ເຊິ່ງແມ່ນການພິພາກສາທີ່ຊີງພະລັງທີ່ສຸດຂອງເຮົາຕໍ່ມັງກອນແດງຜູ້ຍິ່ງໃຫຍ່. ໃນທີ່ສຸດ ເຮົາໄດ້ສ້າງຄົນອີກປະເພດ ເຊິ່ງພາຍໃນຄົນເຫຼົ່ານີ້ ເຮົາໄດ້ກຳນົດບັນດາລູກຊາຍກົກຂອງເຮົາ, ບັນດາລູກຊາຍຂອງເຮົາ, ຄົນຂອງເຮົາ ແລະ ຜູ້ທີ່ໃຫ້ບໍລິການແກ່ເຮົາໄວ້ລ່ວງໜ້າແລ້ວ. ສະນັ້ນ, ທຸກສິ່ງທີ່ເຮົາເຮັດໃນປັດຈຸບັນໄດ້ຖືກເຮົາຈັດແຈງໄວ້ແຕ່ດົນນານແລ້ວ. ເປັນຫຍັງຄົນທີ່ມີອຳນາດໃນປະເທດຈີນຈຶ່ງຂົ່ມເຫັງ ແລະ ບີບບັງຄັບພວກເຈົ້າຢູ່ຊ້ຳແລ້ວຊ້ຳອີກ? ມັນເປັນຍ້ອນວ່າ ມັງກອນແດງຜູ້ຍິ່ງໃຫຍ່ບໍ່ພໍໃຈກັບການສາບແຊ່ງຂອງເຮົາ ແລະ ໄດ້ຕໍ່ຕ້ານເຮົາ. ແນວໃດກໍຕາມ, ທີ່ແນ່ນອນກໍຄື ແມ່ນພາຍໃຕ້ການຂົ່ມເຫັງ ແລະ ການຂົ່ມຂູ່ແບບນີ້ ທີ່ເຮົາໄດ້ເຮັດໃຫ້ບັນດາລູກຊາຍກົກຂອງເຮົາສົມບູນ ເພື່ອວ່າສິ່ງນີ້ອາດຈະຕອບໂຕ້ຢ່າງມີພະລັງຕໍ່ມັງກອນແດງຜູ້ຍິ່ງໃຫຍ່ ແລະບັນດາລູກໆຂອງມັນ. ເຮົາຈະຄັດພວກເຂົາອອກໃນພາຍຫຼັງ. ບັດນີ້, ຫຼັງຈາກທີ່ໄດ້ຟັງພຣະທຳຂອງເຮົາແລ້ວ, ພວກເຈົ້າໄດ້ເຂົ້າໃຈຄວາມໝາຍຂອງການທີ່ເຮົາໄດ້ອະນຸຍາດໃຫ້ພວກເຈົ້າປົກຄອງກັບເຮົາແທ້ບໍ? ເມື່ອເຮົາເວົ້າວ່າ ມັງກອນແດງຜູ້ຍິ່ງໃຫຍ່ແມ່ນຖືກທຳລາຍຈົນສູ່ຄວາມຕາຍຢ່າງສົມບູນ ມັນກໍຍັງແມ່ນເວລາທີ່ບັນດາລູກຊາຍກົກຂອງເຮົາໄດ້ປົກຄອງຮ່ວມກັບເຮົາ. ການຂົ່ມເຫັງລູກຊາຍກົກຂອງເຮົາຂອງມັງກອນແດງຜູ້ຍິ່ງໃຫຍ່ເປັນຜົນດີຕໍ່ເຮົາຢ່າງຍິ່ງ ແລະ ເມື່ອບັນດາລູກຊາຍຂອງເຮົາເຕີບໃຫຍ່ ແລະສາມາດຈັດການກັບເລື່ອງໃນເຮືອນຂອງເຮົາ, ຄົນຮັບໃຊ້ທີ່ຊົ່ວຊ້າ (ຜູ້ເຮັດການບໍລິການ) ຈະຖືກຂັບໄລ່ອອກໄປ. ເນື່ອງຈາກບັນດາລູກຊາຍຂອງເຮົາຈະໄດ້ປົກຄອງຮ່ວມກັບເຮົາ ແລະ ຈະເຮັດໃຫ້ເຈດຕະນາຂອງເຮົາສຳເລັດ ເຮົາກໍຈະຍູ້ຜູ້ເຮັດການບໍລິການລົງສູ່ທະເລສາບແຫ່ງໄຟ ແລະ ມາດເທື່ອລະຄົນ: ບໍ່ວ່າຫຍັງກໍຕາມ, ພວກເຂົາຕ້ອງອອກໄປ! ເຮົາຮູ້ດີວ່າ ຕະກູນຂອງຊາຕານກໍຕ້ອງການຮັບພອນຂອງເຮົາເຊັ່ນກັນ ແລະ ບໍ່ຕ້ອງການກັບໄປຢູ່ພາຍໃຕ້ອຳນາດຂອງຊາຕານ; ແນວໃດກໍຕາມ, ເຮົາມີພຣະດຳລັດຂອງເຮົາ ເຊິ່ງທຸກຄົນຕ້ອງປະຕິບັດຕາມ ແລະ ຕ້ອງມີການບັງຄັບໃຊ້ ແລະ ບໍ່ມີໃຜຈະຖືກຍົກເວັ້ນໄດ້. ຫຼັງຈາກນັ້ນ ເຮົາຈະບອກພວກເຈົ້າກ່ຽວກັບພຣະດຳລັດຂອງເຮົາເທື່ອລະຂໍ້ ເພື່ອບໍ່ໃຫ້ພວກເຈົ້າລະເມີດພວກມັນ.

# ບົດທີ 88

ຜູ້ຄົນບໍ່ສາມາດຈິນຕະນາການຂອບເຂດທີ່ບາດຍ່າງຂອງເຮົາກ້າວໄວຂຶ້ນແທ້ໆ: ນີ້ແມ່ນຄວາມອັດສະຈັນທີ່ໄດ້ເກີດຂຶ້ນເຊິ່ງມະນຸດບໍ່ສາມາດຢັ່ງຮູ້ໄດ້. ບາດຍ່າງຂອງເຮົາໄດ້ສືບຕໍ່ນັບຕັ້ງແຕ່ການເນລະມິດສ້າງໂລກ ແລະ ພາລະກິດຂອງເຮົາບໍ່ເຄີຍຢຸດເຊົາ. ຈັກກະວານໂລກທັງມວນປ່ຽນແປງຈາກມື້ສູ່ມື້ ແລະ ຜູ້ຄົນກໍປ່ຽນແປງຢ່າງສະໝໍ່າສະເໝີເຊັ່ນກັນ. ສິ່ງເຫຼົ່ານີ້ແມ່ນສ່ວນທັງໝົດຂອງພາລະກິດຂອງເຮົາ, ສ່ວນທັງໝົດຂອງແຜນການຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ພວກມັນຢູ່ໃນການຄຸ້ມຄອງຂອງເຮົາ ແລະ ບໍ່ມີມະນຸດຄົນໃດຮູ້ ຫຼື ເຂົ້າໃຈສິ່ງເຫຼົ່ານີ້. ມີແຕ່ເມື່ອເຮົາບອກພວກເຈົ້າດ້ວຍຕົວເຮົາເອງເທົ່ານັ້ນ, ມີແຕ່ເມື່ອເຮົາສື່ສານກັບພວກເຈົ້າຕໍ່ໜ້າເທົ່ານັ້ນ ພວກເຈົ້າຈຶ່ງຈະຮູ້ແມ່ນແຕ່ສ່ວນທີ່ນ້ອຍທີ່ສຸດ; ບໍ່ດັ່ງນັ້ນ ກໍຈະບໍ່ມີໃຜແທ້ໆທີ່ສາມາດມີແນວຄິດກ່ຽວກັບແຜນຜັງສຳລັບແຜນການຂອງເຮົາ. ສິ່ງດັ່ງກ່າວອຳນາດອັນຍິ່ງໃຫຍ່ຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ສິ່ງດັ່ງກ່າວຄືການກະທຳທີ່ໜ້າອັດສະຈັນຂອງເຮົາ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ບໍ່ມີໃຜສາມາດປ່ຽນແປງໄດ້. ສະນັ້ນ, ສິ່ງທີ່ເຮົາເວົ້າໃນມື້ນີ້ເປັນໄປ ແລະ ສິ່ງນີ້ກໍ່ບໍ່ສາມາດປ່ຽນແປງໄດ້. ແນວຄິດຂອງມະນຸດບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວກ່ຽວກັບເຮົາ, ພວກມັນທັງໝົດເປັນພຽງການເວົ້າຫຼິ້ນເວົ້າຫົວທີ່ໄຮ້ສາລະ! ຢ່າຄິດວ່າເຈົ້າມີພຽງພໍແລ້ວ ຫຼື ເຈົ້າພໍໃຈແລ້ວ! ເຮົາຂໍບອກເຈົ້າວ່າ: ເຈົ້າຍັງຕ້ອງກ້າວໄປອີກໄກ! ຈາກແຜນການຄຸ້ມຄອງທັງໝົດຂອງເຮົາ, ພວກເຈົ້າຮູ້ແຕ່ຮູ້ໜ້ອຍດຽວ, ດັ່ງນັ້ນ ພວກເຈົ້າຕ້ອງຟັງສິ່ງທີ່ເຮົາເວົ້າ ແລະ ເຮັດສິ່ງໃດກໍຕາມທີ່ເຮົາບອກໃຫ້ພວກເຈົ້າເຮັດ. ຈົ່ງເຮັດຕາມຄວາມປາຖະໜາຂອງເຮົາໃນທຸກສິ່ງ ແລະ ເຈົ້າຈະໄດ້ຮັບພອນຂອງເຮົາຢ່າງແນ່ນອນ; ໃຜກໍຕາມທີ່ເຊື່ອກໍສາມາດໄດ້ຮັບ, ໃນຂະນະທີ່ຜູ້ໃດທີ່ບໍ່ເຊື່ອກໍຈະມີ "ຄວາມວ່າງເປົ່າ" ທີ່ພວກເຂົາຈິນຕະນາການໄວ້ ເຊິ່ງເກີດເປັນຈິງໃນຕົວພວກເຂົາ. ນີ້ແມ່ນຄວາມຊອບທຳຂອງເຮົາ ແລະ ຍິ່ງໄປກວ່ານັ້ນກໍແມ່ນເດຊານຸພາບຂອງເຮົາ, ຄວາມໂກດຮ້າຍຂອງເຮົາ ແລະ ການຂ້ຽນຕີຂອງເຮົາ. ເຮົາຈະບໍ່ປ່ອຍໃຫ້ຄົນໃດກໍຕາມໜີໄປດ້ວຍຄວາມຄິດ ຫຼື ການກະທຳແມ່ນແຕ່ອັນດຽວ.

ເມື່ອໄດ້ຍິນພຣະທຳຂອງເຮົາ, ຄົນສ່ວນຫຼາຍກໍຢ້ານກົວ ແລະ ສັ່ນເຊັນ, ໃບໜ້າຂອງພວກເຂົາມີຮອຍໜ້າຜາກທີ່ກັງວົນ. ໃນຄວາມເປັນຈິງແລ້ວ ເຮົາໄດ້ເຮັດຜິດຕໍ່ພວກເຈົ້າບໍ? ມັນສາມາດເປັນໄປໄດ້ບໍວ່າເຈົ້າບໍ່ແມ່ນລູກຂອງມັງກອນແດງທີ່ຍິ່ງໃຫຍ່? ເຈົ້າເຖິງກັບທຳທ່າວ່າເປັນຄົນດີ! ເຈົ້າເຖິງກັບທຳທ່າວ່າເປັນລູກຊາຍກົກຂອງເຮົາ! ເຈົ້າຄິດວ່າເຮົາຕາບອດບໍ? ເຈົ້າຄິດວ່າເຮົາບໍ່ສາມາດແຍກແຍະລະຫວ່າງຜູ້ຄົນບໍ? ເຮົາແມ່ນພຣະເຈົ້າຜູ້ທີ່ຄົ້ນຫາໃນສ່ວນເລິກທີ່ສຸດໃນຫົວໃຈຂອງຜູ້ຄົນ: ນີ້ຄືສິ່ງທີ່ເຮົາບອກກັບລູກຊາຍຂອງເຮົາ ແລະ ສິ່ງທີ່ເຮົາບອກພວກເຈົ້າຜູ້ທີ່ເປັນລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ເຊັ່ນກັນ. ເຮົາເຫັນທຸກສິ່ງຢ່າງຊັດເຈນ, ບໍ່ໄດ້ເຮັດຜິດພາດແມ່ນແຕ່ໜ້ອຍດຽວ. ເຮົາຈະບໍ່ສາມາດຮູ້ສິ່ງທີ່ເຮົາກະທຳໄດ້ແນວໃດ? ເຮົາຊັດເຈນຫຼາຍໃນສິ່ງທີ່ເຮົາເຮັດ! ເປັນຫຍັງເຮົາຈຶ່ງເວົ້າວ່າເຮົາແມ່ນພຣະເຈົ້າເອງ, ພຣະຜູ້ສ້າງຂອງຈັກກະວານ ແລະ ທຸກສິ່ງ? ເປັນຫຍັງເຮົາຈຶ່ງເວົ້າວ່າເຮົາແມ່ນພຣະເຈົ້າຜູ້ກວດສອບສ່ວນເລິກທີ່ສຸດໃນຫົວໃຈຂອງຜູ້ຄົນ? ເຮົາຮູ້ສະຖານະການຂອງທຸກຄົນເປັນຢ່າງດີ.

ພວກເຈົ້າຄິດວ່າເຮົາບໍ່ຮູ້ສິ່ງທີ່ຕ້ອງເຮັດ ຫຼື ສິ່ງທີ່ຕ້ອງເວົ້າບໍ? ນີ້ບໍ່ແມ່ນຄວາມກັງວົນຂອງເຈົ້າ. ໃຫ້ລະມັດລະວັງເພື່ອຈະບໍ່ຖືກຂ້າດ້ວຍມືຂອງເຮົາ; ເຈົ້າຈະປະສົບກັບການສູນເສຍໃນລັກສະນະນັ້ນ. ບົດບັນຍັດບໍລິຫານຂອງເຮົາຄືການບໍ່ໃຫ້ອະໄພ. ເຈົ້າເຂົ້າໃຈບໍ? ທັງໝົດທີ່ກ່າວມາຂ້າງເທິງແມ່ນພາກສ່ວນຕ່າງໆຂອງບົດບັນຍັດບໍລິຫານຂອງເຮົາ. ນັບແຕ່ມື້ທີ່ເຮົາບອກພວກມັນຕໍ່ພວກເຈົ້າ, ຖ້າພວກເຈົ້າເຮັດການລະເມີດໃດໆຕື່ມອີກ ມັນຈະມີຜົນກຳ ເພາະກ່ອນໜ້ານີ້ພວກເຈົ້າບໍ່ໄດ້ເຂົ້າໃຈ.

ຕອນນີ້ເຮົາປະກາດໃຊ້ພຣະດຳລັດຂອງເຮົາສຳລັບພວກເຈົ້າ (ມີຜົນບັງຄັບໃຊ້ນັບແຕ່ມື້ປະກາດໃຊ້, ກຳນົດການລົງໂທດຕ່າງໆໃຫ້ແກ່ຄົນທີ່ແຕກຕ່າງກັນ):

ເຮົາຮັກສາຄຳສັນຍາຂອງເຮົາ ແລະ ທຸກສິ່ງກໍຢູ່ໃນມືຂອງເຮົາ: ໃຜກໍຕາມທີ່ສົງໄສຈະຖືກຂ້າຢ່າງແນ່ນອນ. ບໍ່ມີຫ້ອງວ່າງສຳລັບການພິຈາລະນາໃດໆ; ພວກເຂົາຈະຖືກກຳຈັດທັນທີ, ສະນັ້ນແລ້ວກໍກຳຈັດຄວາມກຽດຊັງຂອງຫົວໃຈເຮົາ. (ນັບແຕ່ນີ້ເປັນຕົ້ນໄປ ມັນໄດ້ຮັບການຢືນຢັນແລ້ວວ່າ ໃຜກໍຕາມທີ່ຖືກຂ້າຕ້ອງບໍ່ແມ່ນສະມາຊິກຂອງອານາຈັກຂອງເຮົາ ແລະ ຕ້ອງເປັນລູກຫຼານຂອງຊາຕານ).

ໃນນາມຂອງລູກຊາຍກົກ, ເຈົ້າຄວນຮັກສາຕຳແໜ່ງຂອງຕົວເອງໄວ້ ແລະ ປະຕິບັດໜ້າທີ່ຂອງເຈົ້າເອງໃຫ້ດີ ແລະ ຢ່າສອດຮູ້ສອດເຫັນ. ເຈົ້າຄວນຖວາຍຕົວເຈົ້າເອງໃຫ້ແກ່ແຜນການຄຸ້ມຄອງຂອງເຮົາ ແລະ ທຸກແຫ່ງຫົນທີ່ເຈົ້າໄປ ເຈົ້າຄວນເປັນປະຈັກພະຍານທີ່ດີໃຫ້ແກ່ເຮົາ ແລະ ມອບສະຫງ່າລາສີໃຫ້ແກ່ຊື່ຂອງເຮົາ. ຢ່າເຮັດການກະທຳທີ່ໜ້າອັບອາຍ; ຈົ່ງເປັນແບບຢ່າງໃຫ້ແກ່ລູກຊາຍຂອງເຮົາທັງໝົດ ແລະ ຄົນຂອງເຮົາ. ຢ່າເຮັດຊົ່ວແມ່ນແຕ່ຄາວດຽວ: ເຈົ້າຕ້ອງປາກົດຕົວຕໍ່ໜ້າທຸກຄົນທີ່ມີຕົວຕົນຂອງລູກຊາຍກົກຢູ່ສະເໝີ ແລະ ບໍ່ແມ່ນຄົນຮັບໃຊ້; ກົງກັນຂ້າມ, ເຈົ້າຄວນເຊີດໜ້າຊູຕາກ້າວໄປຂ້າງໜ້າ. ເຮົາກຳລັງຂໍໃຫ້ພວກເຈົ້າມອບສະຫງ່າລາສີໃຫ້ແກ່ຊື່ຂອງເຮົາ, ບໍ່ແມ່ນເພື່ອເຮັດໃຫ້ເສື່ອມເສຍຊື່ຂອງເຮົາ. ບັນດາຜູ້ທີ່ເປັນລູກຊາຍກົກແຕ່ລະຄົນມີໜ້າທີ່ສ່ວນຕົວຂອງຕົນເອງ ແລະ ບໍ່ສາມາດເຮັດທຸກສິ່ງໄດ້. ນີ້ແມ່ນຄວາມຮັບຜິດຊອບທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າ ແລະ ມັນບໍ່ແມ່ນເພື່ອໃຫ້ພວກເຈົ້າໜີຄວາມຮັບຜິດຊອບ. ເຈົ້າຕ້ອງອຸທິດຕົວເອງໝົດໃຈ ພ້ອມກັບຄວາມຄິດທັງໝົດຂອງເຈົ້າ ແລະ ກຳລັງທັງໝົດຂອງເຈົ້າເພື່ອປະຕິບັດສິ່ງທີ່ເຮົາໄດ້ມອບໝາຍໃຫ້ພວກເຈົ້າ.

ນັບຈາກມື້ນີ້ໄປ, ທົ່ວໂລກຈັກກະວານ ໜ້າທີ່ຂອງການດູແລລູກຊາຍທັງໝົດຂອງເຮົາ ແລະ ຄົນທັງໝົດຂອງເຮົາຈະຖືກມອບໝາຍໃຫ້ແກ່ລູກຊາຍກົກຂອງເຮົາໄດ້ປະຕິບັດ ແລະ ເຮົາຈະຂ້ຽນຕີໃຜກໍຕາມທີ່ບໍ່ສາມາດອຸທິດຫົວໃຈ ແລະ ຄວາມຄິດທັງໝົດຂອງພວກເຂົາເພື່ອປະຕິບັດມັນ. ນີ້ແມ່ນຄວາມຊອບທຳຂອງເຮົາ. ເຮົາຈະບໍ່ປ່ອຍ ຫຼື ຖືເບົາກັບແມ່ນແຕ່ລູກຊາຍກົກຂອງເຮົາ.

ຖ້າມີຄົນໃດໜຶ່ງທ່າມກາງລູກຊາຍຂອງເຮົາ ຫຼື ທ່າມກາງຄົນຂອງເຮົາທີ່ເຍາະເຍີ້ຍ ຫຼື ດູໝິ່ນຄົນໜຶ່ງໃນລູກຊາຍກົກຂອງເຮົາ, ເຮົາຈະລົງໂທດພວກເຂົາຢ່າງໂຫດຮ້າຍ ຍ້ອນວ່າລູກຊາຍກົກຂອງເຮົາເປັນຕົວແທນຂອງຕົວເຮົາເອງ; ສິ່ງທີ່ຄົນໃດໜຶ່ງກະທຳຕໍ່ພວກເຂົາ, ພວກເຂົາກໍກະທຳຕໍ່ເຮົາເຊັ່ນກັນ. ນີ້ແມ່ນບົດບັນຍັດທີ່ຮ້າຍແຮງທີ່ສຸດຂອງເຮົາ. ເຮົາຈະອະນຸຍາດໃຫ້ລູກຊາຍກົກຂອງເຮົາຈັດການຄວາມຊອບທຳຂອງເຮົາຕໍ່ລູກຊາຍຂອງເຮົາ ແລະ ຄົນຂອງເຮົາຄົນທີ່ລະເມີດຕໍ່ບົດບັນຍັດນີ້ຕາມຄວາມປາຖະໜາຂອງພວກເຂົາ.

ເຮົາຈະຄ່ອຍໆປະຖິ້ມໃຜກໍຕາມທີ່ນັບຖືກເຮົາແບບຫຼົ້ນໆ ແລະ ໃຫ້ຄວາມສຳຄັນກັບແຕ່ອາຫານຂອງເຮົາ, ເຄື່ອງນຸ່ງ ແລະ ການນອນຫຼັບ, ເຂົ້າຮ່ວມພຽງແຕ່ກິດຈະການພາຍນອກຂອງເຮົາ ແລະ ບໍ່ຄຳນຶງເຖິງພາລະຂອງເຮົາ ແລະ ບໍ່ໃສ່ໃຈຕໍ່ການປະຕິບັດໜ້າທີ່ຂອງພວກເຂົາເອງຢ່າງຖືກຕ້ອງ. ສິ່ງນີ້ແມ່ນມຸ້ງໄປຫາທຸກຄົນທີ່ມີຫູ.

ໃຜກໍຕາມທີ່ເຮັດການບໍລິການແກ່ເຮົາຕ້ອງຖອຍຢ່າງເຊື່ອຟັງໂດຍບໍ່ຕ້ອງຄັດຄ້ານ. ໃຫ້ລະມັດລະວັງ ຫຼື ບໍ່ດັ່ງນັ້ນເຮົາຈະຄັດເຈົ້າອອກ. (ນີ້ແມ່ນບົດບັນຍັດເພີ່ມເຕີມ).

ລູກຊາຍກົກຂອງເຮົາຈະຈັບເອົາທ່ອນເຫຼັກນັບຈາກນີ້ເປັນຕົ້ນໄປ ແລະ ເລີ່ມປະຕິບັດສິດອຳນາດຂອງເຮົາເພື່ອປົກຄອງທຸກຊົນຊາດ ແລະ ທຸກຄົນ, ເພື່ອຍ່າງທ່າມກາງທຸກຊົນຊາດ ແລະ ທຸກຄົນ ແລະເພື່ອດຳເນີນການພິພາກສາ, ຄວາມຊອບທຳ ແລະ ເດຊານຸພາບຂອງເຮົາທ່າມກາງທຸກຊົນຊາດ ແລະທຸກຄົນ. ລູກຊາຍຂອງເຮົາ ແລະ ຄົນຂອງເຮົາຈະຢຳເກງເຮົາ, ສັນລະເສີນເຮົາ, ເຊີດຊູເຮົາ ແລະ ໃຫ້ກຽດເຮົາຢ່າງບໍ່ຢຸດຢ່ອນ, ຍ້ອນວ່າແຜນການຄຸ້ມຄອງຂອງເຮົາໄດ້ຖືກປະຕິບັດ ແລະ ລູກຊາຍກົກຂອງເຮົາສາມາດປົກຄອງຮ່ວມກັບເຮົາ.

ນີ້ແມ່ນສ່ວນໜຶ່ງຂອງບົດບັນຍັດບໍລິຫານຂອງເຮົາ; ຫຼັງຈາກນີ້ ເຮົາຈະບອກພວກມັນໃຫ້ແກ່ພວກເຈົ້າໃນຂະນະທີ່ພາລະກິດຄືບໜ້າໄປ. ຈາກບົດບັນຍັດບໍລິຫານທີ່ກ່າວມາຂ້າງເທິງ, ພວກເຈົ້າຈະເຫັນຈັງຫວະທີ່ເຮົາປະຕິບັດພາລະກິດຂອງເຮົາ ພ້ອມທັງຂັ້ນຕອນທີ່ພາລະກິດຂອງເຮົາໄດ້ໄປເຖິງ. ນີ້ຈະເປັນການຢືນຢັນ.

ເຮົາໄດ້ພິພາກສາຊາຕານແລ້ວ. ຍ້ອນວ່າຄວາມປະສົງຂອງເຮົາບໍ່ໄດ້ຖືກຂັດຂວາງ ແລະ ຍ້ອນວ່າລູກຊາຍກົກຂອງເຮົາໄດ້ຮັບສະຫງ່າລາສີຄຽງຂ້າງກັບເຮົາ, ເຮົາໄດ້ປະຕິບັດຄວາມຊອບທຳ ແລະເດຊານຸພາບຂອງເຮົາເທິງໂລກ ແລະ ທຸກສິ່ງທີ່ເປັນຂອງຊາຕານແລ້ວ. ເຮົາບໍ່ໄດ້ຍົກນິ້ວມື ຫຼື ເອົາໃຈໃສ່ກັບຊາຕານເລີຍ (ຍ້ອນວ່າມັນບໍ່ສົມຄວນແມ່ນແຕ່ຈະສົນທະນາກັບເຮົາ). ເຮົາພຽງແຕ່ສືບຕໍ່ປະຕິບັດສິ່ງທີ່ເຮົາຕ້ອງປະຕິບັດ. ພາລະກິດຂອງເຮົາດຳເນີນໄປຢ່າງລາບລື່ນເທື່ອລະຂັ້ນຕອນ ແລະ ຄວາມປະສົງຂອງເຮົາບໍ່ໄດ້ຖືກຂັດຂວາງທົ່ວແຜ່ນດິນໂລກທັງໝົດ. ສິ່ງນີ້ເຮັດໃຫ້ຊາຕານໄດ້ຮັບຄວາມອັບອາຍໃນລະດັບໜຶ່ງ ແລະ ມັນໄດ້ຖືກທຳລາຍຢ່າງສິ້ນເຊີງ, ແຕ່ສິ່ງນີ້ບໍ່ໄດ້ປະຕິບັດຕາມຄວາມປະສົງຂອງເຮົາໃນຕົວຂອງມັນເອງ. ເຮົາຍັງໄດ້ອະນຸຍາດໃຫ້ລູກຊາຍກົກຂອງເຮົາປະຕິບັດບົດບັນຍັດບໍລິຫານຂອງເຮົາກັບພວກເຂົາເຊັ່ນກັນ. ໃນດ້ານໜຶ່ງ, ສິ່ງທີ່ເຮົາເຮັດໃຫ້ຊາຕານເຫັນແມ່ນຄວາມໂກດຮ້າຍຂອງເຮົາທີ່ມີຕໍ່ມັນ; ໃນອີກດ້ານໜຶ່ງ, ເຮົາເຮັດໃຫ້ມັນເຫັນສະຫງ່າລາສີຂອງເຮົາ (ເຫັນວ່າລູກຊາຍກົກຂອງເຮົາແມ່ນປະຈັກພະຍານທີ່ດັງກ້ອງກັງວານທີ່ສຸດຕໍ່ຄວາມອັບອາຍຂອງຊາຕານ). ເຮົາບໍ່ໄດ້ລົງໂທດມັນເປັນການສ່ວນຕົວ; ກົງກັນຂ້າມ, ເຮົາປ່ອຍໃຫ້ລູກຊາຍກົກຂອງເຮົາປະຕິບັດຄວາມຊອບທຳ ແລະ ເດຊານຸພາບຂອງເຮົາ. ຍ້ອນວ່າຊາຕານເຄີຍທາລຸນລູກຊາຍຂອງເຮົາ, ຂົ່ມເຫັງລູກຊາຍຂອງເຮົາ ແລະ ກົດຂີ່ລູກຊາຍຂອງເຮົາ, ມື້ນີ້ຫຼັງຈາກທີ່ການບໍລິການຂອງມັນສິ້ນສຸດລົງ, ເຮົາຈະອະນຸຍາດໃຫ້ລູກຊາຍກົກຜູ້ໃຫຍ່ຂອງເຮົາຄັດມັນອອກ. ຊາຕານບໍ່ມີອຳນາດໃນການຕໍ່ຕ້ານການລົ້ມຈົມນັ້ນໄດ້. ການເປັນ

ອຳມະພາດຂອງທຸກຊົນຊາດໃນໂລກເປັນປະຈັກພະຍານທີ່ດີທີ່ສຸດ; ຄົນທີ່ກຳລັງຕໍ່ສູ້ ແລະ ປະເທດທີ່ມີສົງຄາມແມ່ນການສະແດງອອກທີ່ເຫັນໄດ້ຊັດເຈນເຖິງການລົ້ມລະລາຍຂອງອານາຈັກຊາຕານ. ເຫດຜົນທີ່ເຮົາບໍ່ໄດ້ສຳແດງໝາຍສຳຄັນ ແລະ ສິ່ງອັດສະຈັນໃດໆໃນອະດີດກໍແມ່ນເພື່ອນຳເອົາຄວາມອັບອາຍມາສູ່ຊາຕານ ແລະ ມອບສະຫງ່າລາສີໃຫ້ແກ່ຊື່ຂອງເຮົາເທື່ອລະບາດກ້າວ. ເມື່ອຊາຕານຖືກກຳຈັດຢ່າງສິ້ນເຊີງແລ້ວ, ເຮົາກໍເລີ່ມສະແດງລິດອຳນາດຂອງເຮົາ: ສິ່ງທີ່ເຮົາກ່າວກໍກາຍເປັນຈິງ ແລະ ສິ່ງເໜືອທຳມະຊາດທີ່ບໍ່ສອດຄ່ອງກັບແນວຄິດຂອງມະນຸດຈະຖືກເຕີມເຕັມ (ສິ່ງເຫຼົ່ານີ້ໝາຍເຖິງພອນທີ່ຈະມາເຖິງໃນໄວໆນີ້). ຍ້ອນວ່າເຮົາເອງແມ່ນພຣະເຈົ້າທີ່ແທ້ຈິງ ແລະ ເຮົາບໍ່ມີກົດລະບຽບ, ຍ້ອນວ່າເຮົາກ່າວຕາມການປ່ຽນແປງໃນແຜນການຄຸ້ມຄອງຂອງເຮົາ, ສະນັ້ນ ສິ່ງທີ່ເຮົາໄດ້ກ່າວໃນອະດີດຈຶ່ງບໍ່ຈຳເປັນຕ້ອງໃຊ້ໄດ້ໃນປັດຈຸບັນ. ຢ່າຍຶດຕິດກັບແນວຄິດຂອງເຈົ້າເລີຍ! ເຮົາບໍ່ແມ່ນພຣະເຈົ້າທີ່ປະຕິບັດຕາມກົດ; ເມື່ອມີເຮົາ ທຸກສິ່ງກໍເປັນອິດສະຫຼະ, ເປັນເລີດ ແລະ ຖືກປົດປ່ອຍຢ່າງສົມບູນ. ບາງເທື່ອສິ່ງທີ່ຖືກກ່າວມື້ວານນີ້ແມ່ນຫຼ້າສະໄໝໄປແລ້ວໃນມື້ນີ້ ຫຼື ບາງເທື່ອ ມື້ນີ້ ມັນອາດຈະຖືກໂຍນຖິ້ມໄປແລ້ວ (ຢ່າງໃດກໍຕາມ, ບົດບັນຍັດບໍລິຫານຂອງເຮົາຈະບໍ່ປ່ຽນແປງນັບແຕ່ມື້ທີ່ພວກມັນຖືກປະກາດໃຊ້). ສິ່ງເຫຼົ່ານີ້ແມ່ນບາດກ້າວໃນແຜນການຄຸ້ມຄອງຂອງເຮົາ. ຢ່າຍຶດຕິດກັບກົດລະບຽບ. ທຸກໆມື້ມີແສງສະຫວ່າງອັນໃໝ່ ແລະ ມີການເປີດເຜີຍໃໝ່ໆ ແລະ ນັ້ນແມ່ນແຜນການຂອງເຮົາ. ທຸກໆມື້ແສງສະຫວ່າງຂອງເຮົາຈະຖືກເປີດເຜີຍໃນຕົວເຈົ້າ ແລະ ສຽງຂອງເຮົາຈະຖືກປ່ອຍອອກມາຕໍ່ໂລກຈັກກະວານ. ເຈົ້າເຂົ້າໃຈບໍ? ນີ້ແມ່ນໜ້າທີ່ຂອງເຈົ້າ, ແມ່ນຄວາມຮັບຜິດຊອບທີ່ເຮົາໄດ້ມອບໝາຍໃຫ້ແກ່ເຈົ້າ. ເຈົ້າຕ້ອງບໍ່ລະເລີຍມັນແມ່ນແຕ່ຄາວດຽວ. ເຮົາຈະໃຊ້ຄົນທີ່ເຮົາຮອງຮັບຈົນເຖິງທີ່ສຸດ ແລະ ສິ່ງນີ້ຈະບໍ່ປ່ຽນແປງໄປຈັກເທື່ອ. ຍ້ອນວ່າເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ, ເຮົາຮູ້ວ່າຄົນປະເພດໃດຄວນເຮັດສິ່ງໃດ ພ້ອມທັງຄົນປະເພດໃດສາມາດເຮັດສິ່ງໃດໄດ້. ນີ້ແມ່ນອຳນາດອັນໄພສານຂອງເຮົາ.

# ບົດທີ 89

ມັນບໍ່ງ່າຍທີ່ຈະເຮັດທຸກສິ່ງໃຫ້ສອດຄ່ອງກັບຄວາມຕັ້ງໃຈຂອງເຮົາ; ມັນບໍ່ແມ່ນເລື່ອງການບັງຄັບຕົວເຈົ້າເອງໃຫ້ທຳທ່າເຮັດ; ແຕ່ກົງກັນຂ້າມ ມັນຂຶ້ນຢູ່ກັບວ່າເຮົາໄດ້ສະໜອງໃຫ້ເຈົ້າດ້ວຍຄວາມສາມາດຂອງເຮົາກ່ອນການສ້າງໂລກ ຫຼື ບໍ່. ທຸກສິ່ງເຫຼົ່ານີ້ແມ່ນຂຶ້ນຢູ່ກັບເຮົາ. ພວກມັນບໍ່ແມ່ນສິ່ງທີ່ມະນຸດສາມາດເຮັດສຳເລັດໄດ້. ເຮົາຮັກຜູ້ທີ່ເຮົາປາດຖະໜາທີ່ຈະຮັກ ແລະ ໃຜກໍຕາມທີ່ເຮົາກ່າວວ່າແມ່ນລູກຊາຍກົກ ແນ່ນອນວ່າຄົນນັ້ນກໍຄືລູກຊາຍກົກ. ສິ່ງນັ້ນຖືກຕ້ອງຢ່າງແນ່ນອນ! ເຈົ້າອາດຢາກຈະທຳທ່າເຮັດ ແຕ່ໃນການເຮັດແບບນັ້ນຈະບໍ່ມີປະໂຫຍດຫຍັງ! ເຈົ້າຄິດວ່າເຮົາບໍ່ສາມາດຮູ້ຈັກເຈົ້າໃນສິ່ງທີ່ເຈົ້າເປັນບໍ? ມັນດີພໍສຳລັບເຈົ້າແລ້ວບໍທີ່ພຽງແຕ່ສະແດງພຶດຕິກຳທີ່ດີບາງຢ່າງເມື່ອຢູ່ຕໍ່ໜ້າເຮົາ? ມັນງ່າຍປານນັ້ນບໍ? ແນ່ນອນວ່າບໍ່; ເຈົ້າຕ້ອງມີຄຳສັນຍາຂອງເຮົາ ແລະ ເຈົ້າຕ້ອງມີການກຳນົດໄວ້ລ່ວງໜ້າຂອງເຮົາ. ເຈົ້າຄິດວ່າເຮົາບໍ່ຮູ້ວ່າເຈົ້າເຮັດຫຍັງຢູ່ລັບຫຼັງເຮົາບໍ? ເຈົ້າຊົ່ວຊ້າຫຼາຍ! ຫຼັງຈາກການບໍລິການຂອງເຈົ້າສຳລັບເຮົາສິ້ນສຸດລົງ ກໍຈົ່ງຟ້າວກັບໄປສູ່ທະເລໄຟ ແລະ ມາດ! ເຮົາເບື່ອໜ່າຍ; ເຮົາເຕັມປ່ຽມດ້ວຍຄວາມກຽດຊັງເມື່ອເຫັນເຈົ້າ. ທຸກການບໍລິການເພື່ອເຮົາ, ທຸກຄົນທີ່ບໍ່ຊື່ສັດໃນການສະຫຼະຕົນເອງເພື່ອເຮົາ, ທຸກຄົນທີ່ເຮັດຜິດສິນລະທຳ ແລະ ບໍ່ມີລະບຽບວິໄນ ແລະ ທຸກຄົນທີ່ບໍ່ສາມາດເຂົ້າໃຈເຈດຕະນາຂອງເຮົາ; ຫຼັງຈາກການບໍລິການຂອງພວກເຈົ້າສິ້ນສຸດລົງ ກໍຈົ່ງຮີບໜີໄປໃຫ້ພົ້ນສາຍຕາເຮົາ! ບໍ່ດັ່ງນັ້ນ ເຮົາຈະເຕະເຈົ້າອອກໄປ! ຄົນເຫຼົ່ານີ້ບໍ່ສາມາດຢູ່ໃນເຮືອນຂອງເຮົາໄດ້ (ນັ້ນກໍຄືຄຣິສຕະຈັກ) ແມ່ນແຕ່ວິນາທີດຽວ. ພວກເຂົາຕ້ອງໜີອອກຈາກບ່ອນນີ້ ເພື່ອຈະບໍ່ໄດ້ນຳເອົາຄວາມອັບອາຍມາສູ່ນາມຂອງເຮົາ ແລະ ທຳລາຍຊື່ສຽງຂອງເຮົາ. ຄົນເຫຼົ່ານີ້ແມ່ນລູກຫຼານຂອງມັງກອນແດງໃຫຍ່ທັງໝົດ; ພວກເຂົາໄດ້ຖືກມັງກອນແດງໃຫຍ່ສົ່ງມາເພື່ອຂັດຂວາງການຄຸ້ມຄອງຂອງເຮົາ. ພວກເຂົາຊ່ຽວຊານໃນການຫຼອກລວງ ເພື່ອຂັດຂວາງພາລະກິດຂອງເຮົາ. ລູກຊາຍຂອງເຮົາເອີຍ! ເຈົ້າຕ້ອງເບິ່ງຜ່ານສິ່ງນີ້! ຢ່າພົວພັນກັບຄົນເຫຼົ່ານີ້ເລີຍ. ເມື່ອເຈົ້າເຫັນຄົນແບບນີ້ ຈົ່ງໜີຫ່າງຈາກພວກເຂົາໂດຍໄວເພື່ອຫຼີກເວັ້ນການຕິດກັບດັກຂອງພວກເຂົາ; ສິ່ງນັ້ນຈະນຳອັນຕະລາຍມາສູ່ຊີວິດຂອງເຈົ້າ! ເຮົາກຽດຊັງຄົນເຫຼົ່ານັ້ນທີ່ເວົ້າແບບບໍ່ຄິດທີ່ສຸດ, ຜູ້ທີ່ເຮັດໂດຍບໍ່ຄິດ, ຜູ້ທີ່ພຽງແຕ່ເວົ້າຫຼິ້ນ ແລະ ຫົວຂວັນ ແລະ ຜູ້ທີ່ມີສ່ວນຮ່ວມໃນການສົນທະນາທີ່ອັບປະໂຫຍດ. ເຮົາບໍ່ຕ້ອງການຄົນເຫຼົ່ານີ້ແມ່ນແຕ່ຄົນດຽວ; ພວກເຂົາທັງໝົດແມ່ນເຊື້ອສາຍຂອງຊາຕານ! ພວກເຂົາລໍ້ຫຼິ້ນໂດຍບໍ່ມີເຫດຜົນຫຍັງເລີຍ, ສິ່ງມີຊີວິດເຫຼົ່ານີ້ຄືຫຍັງກັນແທ້? ພວກເຂົາເວົ້າເລື່ອງໄຮ້ສາລະ ແລະ ແລ່ນໄປມາ. ພວກເຂົາຍັງບໍ່ຮູ້ສຶກອັບອາຍເລີຍບໍ? ໃນຄວາມເປັນຈິງແລ້ວ, ຄົນປະເພດນີ້ແມ່ນຜູ້ທີ່ມີຄຸນຄ່າໜ້ອຍທີ່ສຸດ ແລະ ເຮົາເຫັນພວກເຂົາຢ່າງຈະແຈ້ງ ແລະ ໄດ້ປະຖິ້ມພວກເຂົາແຕ່ດົນນານແລ້ວ. ຖ້າເຮົາບໍ່ເຮັດດັ່ງນັ້ນ ແລ້ວເປັນຫຍັງພວກເຂົາຈຶ່ງເວົ້າແບບໄຮ້ສາລະຊໍ້າແລ້ວຊໍ້າອີກໂດຍບໍ່ໄດ້ຖືກເຮົາລົງວິໄນ? ພວກເຂົາແມ່ນລູກຫຼານຂອງມັງກອນແດງໃຫຍ່ຢ່າງແທ້ຈິງ! ປັດຈຸບັນນີ້ ເຮົາໄດ້ເລີ່ມລົບລ້າງສິ່ງເຫຼົ່ານີ້ເທື່ອລະຢ່າງ. ເຮົາສາມາດໃຊ້ລູກຫຼານຂອງຊາຕານຄືກັບລູກຊາຍກົກຂອງເຮົາ, ຄືກັບລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາໄດ້ບໍ?

ແລ້ວເຮົາຈະບໍ່ສັບສົນບໍ? ເຮົາຈະບໍ່ເຮັດແບບນັ້ນຢ່າງແນ່ນອນ. ພວກເຈົ້າເຂົ້າໃຈເລື່ອງນີ້ຢ່າງຈະແຈ້ງແລ້ວບໍ?

ທຸກສິ່ງທີ່ພວກເຈົ້າຜະເຊີນໃນມື້ນີ້, ບໍ່ວ່າຈະເປັນສິ່ງດີ ຫຼື ບໍ່ດີກໍຕາມ ລ້ວນແລ້ວແຕ່ຖືກຈັດແຈງໂດຍມີອັນສະຫຼຽວສະຫຼາດຂອງເຮົາ; ທຸກສິ່ງແມ່ນຖືກປັ້ນແຕ່ງ ແລະ ຄວບຄຸມໂດຍເຮົາ. ນີ້ບໍ່ແມ່ນສິ່ງທີ່ມະນຸດຊາດສາມາດເຮັດສໍາເລັດໄດ້ຢ່າງງ່າຍດາຍ. ບາງຄົນຍັງມີເຫື່ອເຕັມຝາມືຈາກການເປັນຫ່ວງເຮົາ, ແຕ່ແທ້ຈິງແລ້ວ ພວກເຂົາບໍ່ຈໍາເປັນຕ້ອງກັງວົນໃຈເລີຍ! ພວກເຂົາລະເລີຍຕໍ່ໜ້າທີ່ຫຼັກຂອງພວກເຂົາ ແລະ ບໍ່ໄດ້ສະແຫວງຫາເພື່ອເຂົ້າສູ່ຝ່າຍວິນຍານ, ແຕ່ເຖິງຢ່າງນັ້ນ ພວກເຂົາກໍຍັງຕ້ອງການເຕີບໃຫຍ່ໃນຊີວິດ; ຄວາມຫວັງຂອງພວກເຂົາແມ່ນໄຮ້ປະໂຫຍດແທ້ໆ! ພວກເຂົາບໍ່ຮ້ອນໃຈຫຍັງເລີຍແຕ່ເຖິງຢ່າງນັ້ນ ພວກເຂົາກໍຍັງຕ້ອງການປະຕິບັດຕາມຄວາມປະສົງຂອງເຮົາ! ເຈົ້າກັງວົນໃຈແທນເຮົາແຕ່ເຮົາບໍ່ໄດ້ກັງວົນໃຈ. ເຈົ້າກັງວົນໃຈເລື່ອງຫຍັງ? ການປະຕິບັດພາລະກິດຂອງເຈົ້າເພື່ອເຮົາແມ່ນເຮັດພໍເປັນພິທີ ແລະ ເຈົ້າກໍຕົວະຢ່າງໜ້າບໍ່ອາຍ. ເຮົາຂໍບອກເຈົ້າໄວ້! ນັບແຕ່ເວລານີ້ໄປ ເຮົາຈະຂັບໄລ່ຄົນແບບເຈົ້າອອກຈາກເຮືອນຂອງເຮົາ. ຄົນດັ່ງກ່າວບໍ່ຄູ່ຄວນທີ່ຈະຮັບໃຊ້ເຮົາຢູ່ໃນເຮືອນຂອງເຮົາ. ເຮົາກຽດຊັງພວກເຂົາ ຍ້ອນວ່າພວກເຂົາດູໝິ່ນເຮົາດ້ວຍການກະທໍາຂອງພວກເຂົາ. ເມື່ອເວົ້າວ່າ "ການດູໝິ່ນເຮົາແມ່ນເປັນບາບທີ່ບໍ່ອາດອະໄພໄດ້" ນີ້ແມ່ນໝາຍເຖິງໃຜ? ພວກເຈົ້າກະຈ່າງແຈ້ງກ່ຽວກັບເລື່ອງນີ້ບໍ? ບຸກຄົນແບບນີ້ເຊື່ອວ່າບັນຫາຍັງບໍ່ທັນເຖິງຂັ້ນຮ້າຍແຮງເທື່ອ, ເຖິງແມ່ນວ່າເຂົາໄດ້ເຮັດບາບນີ້ແລ້ວກໍຕາມ. ແທ້ຈິງແລ້ວ ບຸກຄົນທີ່ຢູ່ໃນສະພາບທີ່ສັບສົນນີ້ເປັນຄົນຕາບອດ ແລະ ໂງ່ຈ້າ ແລະຈິດວິນຍານຂອງເຂົາຖືກປິດກັ້ນໄວ້! ເຮົາຈະໄລ່ເຈົ້າອອກໄປ! (ຍ້ອນວ່ານີ້ແມ່ນການລໍ້ລວງຂອງຊາຕານຕໍ່ເຮົາ, ເຮົາຊັງມັນຫຼາຍ ແລະ ເລື່ອງນີ້ໄດ້ຖືກກ່າວເຖິງຊໍ້າແລ້ວຊໍ້າອີກ ເຊິ່ງເຮັດໃຫ້ເຮົາໂກດຮ້າຍທຸກຄັ້ງ. ເຮົາບໍ່ສາມາດລະງັບຄວາມໂກດຮ້າຍຂອງເຮົາໄວ້ໄດ້ ແລະ ບໍ່ມີໃຜສາມາດຢຸດມັນໄດ້. ເວລາຍັງບໍ່ທັນມາຮອດເທື່ອ, ບໍ່ດັ່ງນັ້ນ ເຮົາແມ່ນໄດ້ຈັດການກັບຄົນນັ້ນໄປດົນແລ້ວ!) (ເລື່ອງນີ້ກ່ຽວກັບຄວາມຈິງທີ່ວ່າໃນປັດຈຸບັນຍັງມີຄົນຈໍານວນຫຼວງຫຼາຍທີ່ບໍ່ເຊື່ອວ່າຊາວຕ່າງຊາດຈະສະແຫວງຫາທີ່ຈະຫຼັ່ງໄຫຼເຂົ້າສູ່ປະເທດຈີນ; ແມ່ນແຕ່ໃນປັດຈຸບັນນີ້ພວກເຂົາກໍຍັງບໍ່ເຊື່ອ ແລະ ນີ້ເຮັດໃຫ້ຄວາມໂກດຮ້າຍຂອງເຮົາປັ່ນປ່ວນ ແລະ ຟົດຂຶ້ນຢ່າງແຮງ.)

ພາຍໃນເຮືອນຂອງເຮົາ ມີຄົນແບບໃດແທ້ທີ່ເປັນທີ່ພໍໃຈເຮົາ? ໝາຍຄວາມວ່າ ກ່ອນການຊົງສ້າງ, ມີຄົນແບບໃດທີ່ເຮົາໄດ້ກໍານົດໄວ້ລ່ວງໜ້າເພື່ອໃຫ້ອາໄສຢູ່ໃນເຮືອນຂອງເຮົາຕະຫຼອດໄປ? ພວກເຈົ້າຮູ້ບໍ? ພວກເຈົ້າເຄີຍພິຈາລະນາບໍວ່າ ຄົນແບບໃດທີ່ເຮົາຮັກ ແລະ ຄົນແບບໃດທີ່ເຮົາຊັງ? ເຮືອນຂອງເຮົາແມ່ນມີໄວ້ສໍາລັບຄົນທີ່ມີຈິດໜຶ່ງໃຈດຽວກັນກັບເຮົາ ແລະ ຜູ້ທີ່ຮ່ວມສຸກ ແລະ ທຸກກັບເຮົາ, ເວົ້າອີກຢ່າງໜຶ່ງກໍຄື ຜູ້ທີ່ມີສ່ວນຮ່ວມຮັບທັງພອນ ແລະ ຄວາມລໍາບາກ. ທຸກຄົນເຫຼົ່ານີ້ສາມາດຮັກສິ່ງທີ່ເຮົາຮັກໄດ້ ແລະ ຊັງສິ່ງທີ່ເຮົາຊັງ. ພວກເຂົາສາມາດປະຖິ້ມສິ່ງທີ່ເຮົາກຽດຊັງ. ຖ້າເຮົາບອກວ່າພວກເຂົາບໍ່ສາມາດກິນ ພວກເຂົາກໍເຕັມໃຈທີ່ຈະປ່ອຍໃຫ້ທ້ອງຂອງພວກເຂົາເປົ່າວ່າງເພື່ອປະຕິບັດຕາມເຈດຕະນາຂອງເຮົາ. ຄົນແບບນີ້ແມ່ນເຕັມໃຈທີ່ຈະຈິງຮັກພັກດີຕໍ່ເຮົາ ແລະ ສະຫຼະຕົວເອງເພື່ອເຮົາ,

ພວກເຂົາສາມາດຄຳນຶງເຖິງຄວາມພະຍາຍາມອັນແສນເຈັບປວດຂອງເຮົາ ແລະ ພະຍາຍາມຢ່າງສຸດຂີດເພື່ອເຮົາຢູ່ສະເໝີ. ເພາະສະນັ້ນ ສຳລັບຄົນດັ່ງກ່າວແລ້ວ ເຮົາຂໍມອບສະຖານະຂອງລູກຊາຍກົກໃຫ້, ມອບທຸກສິ່ງທີ່ເຮົາມີໃຫ້ພວກເຂົາ: ເຮົາມີຄວາມສາມາດທີ່ຈະນຳພາທຸກຄຣິສຕະຈັກ ແລະ ສິ່ງນີ້ເຮົາຂໍມອບໃຫ້ແກ່ພວກເຂົາ; ເຮົາມີສະຕິປັນຍາ ແລະ ເຮົາກໍຂໍມອບສິ່ງນີ້ໃຫ້ພວກເຂົາເຊັ່ນດຽວກັນ; ເຮົາສາມາດທົນທຸກເພື່ອປະຕິບັດຕາມຄວາມຈິງ ແລະ ເຮົາກໍຈະມອບຄວາມຕັ້ງໃຈໃຫ້ແກ່ຄົນເຫຼົ່ານີ້ເຊັ່ນດຽວກັນ, ເພື່ອເຮັດໃຫ້ພວກເຂົາສາມາດທົນທຸກກັບທຸກສິ່ງເພື່ອເຮົາ; ເຮົາມີຄຸນນະສົມບັດທີ່ດີ ແລະ ເຮົາກໍຈະມອບສິ່ງນີ້ໃຫ້ແກ່ພວກເຂົາເຊັ່ນກັນ, ເພື່ອເຮັດໃຫ້ພວກເຂົາເປັນຄືກັນກັບເຮົາ ໂດຍບໍ່ໃຫ້ແຕກຕ່າງກັນແມ່ນແຕ່ໜ້ອຍດຽວເລີຍ ເພື່ອວ່າຄົນອື່ນຈະໄດ້ເຫັນເຮົາເມື່ອພວກເຂົາເຫັນຄົນເຫຼົ່ານີ້. ປັດຈຸບັນນີ້, ເຮົາກຳລັງວາງຄວາມເປັນພຣະເຈົ້າທີ່ສົມບູນແບບຂອງເຮົາໄວ້ພາຍໃນຄົນເຫຼົ່ານີ້ ເພື່ອເຮັດໃຫ້ພວກເຂົາສາມາດດຳລົງຊີວິດຢູ່ໃນດ້ານໜຶ່ງຂອງຄວາມເປັນພຣະເຈົ້າທີ່ສົມບູນແບບຂອງເຮົາ, ເພື່ອວ່າພວກເຂົາຈະສາມາດສະແດງອອກເຖິງເຮົາໄດ້ຢ່າງສົມບູນ; ນີ້ຄືຄວາມຕັ້ງໃຈຂອງເຮົາ. ຢ່າສະແຫວງຫາທີ່ຈະເປັນຄືກັບເຮົາພຽງແຕ່ດ້ານພາຍນອກ (ກິນແບບດຽວກັບເຮົາ ຫຼື ນຸ່ງເຄື່ອງແບບດຽວກັບເຮົາ); ທັງໝົດນີ້ແມ່ນໄຮ້ປະໂຫຍດ ແລະ ເຈົ້າພຽງແຕ່ຈະທຳລາຍຕົວເຈົ້າເອງຖ້າເຈົ້າສະແຫວງຫາສິ່ງດັ່ງກ່າວນີ້. ນີ້ກໍຍ້ອນວ່າ ບັນດາຜູ້ທີ່ສະແຫວງຫາທີ່ຈະຮຽນແບບເຮົາພຽງແຕ່ພາຍນອກ ແມ່ນຄົນໃຊ້ຂອງຊາຕານ ແລະ ຄວາມພະຍາຍາມແບບນັ້ນແມ່ນກົນອຸບາຍຂອງຊາຕານ; ມັນສະທ້ອນເຖິງຄວາມທະເຍີທະຍານຂອງຊາຕານ. ເຈົ້າສະແຫວງຫາທີ່ຈະເປັນຄືກັນກັບເຮົາ ແຕ່ວ່າເຈົ້າຄູ່ຄວນແລ້ວບໍ? ເຮົາຈະຢຽບເຈົ້າໃຫ້ຕາຍ! ພາລະກິດຂອງເຮົາດຳເນີນຢູ່ຕະຫຼອດເວລາ, ກຳລັງຂະຫຍາຍໄປສູ່ທຸກຊາດໃນໂລກ. ຈົ່ງຕິດຕາມບາດກ້າວຂອງເຮົາໂດຍໄວ!

# ບົດທີ 90

ທຸກຄົນທີ່ຕາບອດຕ້ອງອອກຈາກເຮົາໄປ ແລະ ຕ້ອງບໍ່ຢູ່ດົນກວ່ານີ້, ສຳລັບຜູ້ທີ່ເຮົາຕ້ອງການແມ່ນຜູ້ທີ່ສາມາດຮູ້ຈັກເຮົາ, ຜູ້ທີ່ສາມາດເຫັນເຮົາ ແລະ ຜູ້ທີ່ສາມາດໄດ້ຮັບທຸກສິ່ງຈາກເຮົາ. ແລ້ວໃຜຈະສາມາດໄດ້ຮັບທຸກສິ່ງຈາກເຮົາແທ້ໆ? ແນ່ນອນທີ່ສຸດວ່າມີຄົນປະເພດນີ້ໜ້ອຍຫຼາຍ ແລະ ພວກເຂົາຈະໄດ້ຮັບພອນຂອງເຮົາຢ່າງແນ່ນອນ. ເຮົາຮັກຄົນເຫຼົ່ານີ້ ແລະ ເຮົາຈະເລືອກເອົາພວກເຂົາເທື່ອລະຄົນໃຫ້ເປັນມືຂວາຂອງເຮົາ, ເປັນການສະແດງອອກຂອງເຮົາ. ເຮົາຈະເຮັດໃຫ້ທຸກຊົນຊາດ ແລະ ທຸກຄົນສັນລະເສີນເຮົາຢ່າງບໍ່ຢຸດເຊົາ, ເຊີດຊູຕໍ່ໄປເລື້ອຍໆເພື່ອເຫັນແກ່ຄົນເຫຼົ່ານີ້. ໂອ ພູຊີໂອນເອີຍ! ຈົ່ງຍົກແຜ່ນປ້າຍແຫ່ງໄຊຊະນະຂຶ້ນ ແລະ ເຊີດຊູເຮົາ! ຍ້ອນວ່າເຮົາໄປທົ່ວຈັກກະວານ ແລະ ຈົນສຸດປາຍແຜ່ນດິນໂລກ, ປົກຄຸມທຸກມຸມຂອງພູ, ແມ່ນໍ້າ ແລະ ທຸກສິ່ງ ກ່ອນທີ່ຈະກັບມານີ້ອີກຄັ້ງ. ເຮົາກັບມາຢ່າງມີໄຊພ້ອມດ້ວຍຄວາມຊອບທຳ, ການພິພາກສາ, ຄວາມໂກດຮ້າຍ ແລະ ການເຜົາໄໝ້ ແລະ ຍິ່ງໄປກວ່ານັ້ນແມ່ນພ້ອມກັບລູກຊາຍກົກຂອງເຮົາ. ທຸກສິ່ງທີ່ເຮົາກຽດຊັງ ແລະ ທຸກຄົນ, ທຸກເລື່ອງ ແລະວັດຖຸທີ່ເຮົາລັງກຽດ, ເຮົາກໍໂຍນຖິ້ມໄປໄກໆ. ເຮົາມີໄຊຊະນະ ແລະ ເຮົາສຳເລັດທຸກສິ່ງທີ່ເຮົາຕ້ອງການກະທຳ. ໃຜກ້າເວົ້າວ່າເຮົາບໍ່ໄດ້ສຳເລັດພາລະກິດຂອງເຮົາ? ໃຜກ້າເວົ້າວ່າເຮົາບໍ່ໄດ້ຮັບລູກຊາຍກົກຂອງເຮົາ? ໃຜກ້າເວົ້າວ່າເຮົາບໍ່ໄດ້ກັບຄືນມາພ້ອມກັບໄຊຊະນະ? ຄົນເຊັ່ນນັ້ນແມ່ນພັກພວກຂອງຊາຕານຢ່າງແນ່ນອນ; ພວກເຂົາແມ່ນຜູ້ທີ່ຍາກຈະໄດ້ຮັບການອະໄພໂທດຈາກເຮົາ. ພວກເຂົາຕາບອດ, ພວກເຂົາເປັນຜີຮ້າຍທີ່ສົກກະປົກ ແລະ ເຮົາກຽດຊັງພວກເຂົາທີ່ສຸດ. ໃນສິ່ງເຫຼົ່ານີ້ ເຮົາຈະເລີ່ມເປີດເຜີຍຄວາມໂກດຮ້າຍຂອງເຮົາ ແລະ ການພິພາກສາຂອງເຮົາທັງໝົດ ແລະ ຜ່ານໄຟທີ່ເຜົາໄໝ້ຂອງເຮົາ ເຮົາຈະຈູດໄຟໃຫ້ແກ່ຈັກກະວານ ແລະ ແຜ່ນດິນໂລກແຕ່ຕົ້ນຈົນຈົບ, ສ່ອງສະຫວ່າງທຸກໆມຸມ, ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ.

ທັນທີທີ່ເຈົ້າເຂົ້າໃຈພຣະທຳຂອງເຮົາ, ເຈົ້າຄວນໄດ້ຮັບການປອບໃຈຈາກພວກມັນ; ເຈົ້າຕ້ອງບໍ່ປ່ອຍໃຫ້ພວກມັນຜ່ານໄປໂດຍບໍ່ໄດ້ຮັບການເອົາໃຈໃສ່. ພຣະຄຳແຫ່ງການພິພາກສາເກີດຂຶ້ນທຸກມື້, ແລ້ວເປັນຫຍັງພວກເຈົ້າຈຶ່ງໂງ່ຈ້າ ແລະ ເຢັນຊາແທ້? ເປັນຫຍັງເຈົ້າຈຶ່ງບໍ່ຮ່ວມມືກັບເຮົາ? ເຈົ້າເຕັມໃຈທີ່ຈະໄປນະຮົກບໍ? ເຮົາກ່າວວ່າ ເຮົາແມ່ນພຣະເຈົ້າແຫ່ງຄວາມເມດຕາຕໍ່ລູກຊາຍກົກຂອງເຮົາ, ຕໍ່ລູກຊາຍ ແລະ ຄົນຂອງເຮົາ, ແລ້ວພວກເຈົ້າເຂົ້າໃຈເລື່ອງນີ້ໄດ້ແນວໃດ? ນີ້ບໍ່ແມ່ນຄຳເວົ້າທີ່ທຳມະດາ ແລະ ມັນຄວນຖືກເຂົ້າໃຈຈາກທັດສະນະຄະຕິດ້ານບວກ. ໂອ ມະນຸດຊາດທີ່ຕາບອດເອີຍ! ເຮົາໄດ້ຊ່ວຍພວກເຈົ້າໃຫ້ລອດພົ້ນຫຼາຍເທື່ອແລ້ວ, ນຳພວກເຈົ້າອອກຈາກກຳມືຂອງຊາຕານ ແລະ ອອກຈາກການຂ້ຽນຕີ ເພື່ອວ່າພວກເຈົ້າອາດຈະໄດ້ຮັບຄຳສັນຍາຂອງເຮົາ, ແລ້ວເປັນຫຍັງພວກເຈົ້າຈຶ່ງບໍ່ສະແດງຄວາມເຫັນໃຈໃດໆແກ່ຫົວໃຈຂອງເຮົາ? ພວກເຈົ້າຄົນໃດໜຶ່ງຈະສາມາດຖືກຊ່ວຍໃຫ້ລອດພົ້ນດ້ວຍວິທີນີ້ບໍ? ຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ ແລະ ການພິພາກສາຂອງເຮົາບໍ່ສະແດງຄວາມເມດຕາຕໍ່ຊາຕານ. ແຕ່ເທົ່າທີ່ພວກເຈົ້າຮູ້, ຈຸດປະສົງຂອງສິ່ງເຫຼົ່ານີ້ແມ່ນເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນ,

ແຕ່ພວກເຈົ້າພຽງບໍ່ສາມາດເຂົ້າໃຈອຸປະນິໄສຂອງເຮົາໄດ້ ແລະ ພວກເຈົ້າບໍ່ຮູ້ຈັກຫຼັກການທີ່ຢູ່ເບື້ອງຫຼັງການກະທຳຂອງເຮົາ. ພວກເຈົ້າຄິດວ່າເຮົາບໍ່ໄດ້ແຕກຕ່າງໃນຄວາມຮຸນແຮງຂອງການກະທຳຕ່າງໆຂອງເຮົາ ແລະ ເຮົາບໍ່ໄດ້ແຕກຕ່າງລະຫວ່າງເປົ້າໝາຍຕ່າງໆຂອງການກະທຳຂອງເຮົາ, ຊ່າງໂງ່ແທ້! ເຮົາສາມາດເຫັນທຸກຄົນ, ທຸກເຫດການ ແລະ ທຸກສິ່ງໄດ້ຢ່າງຊັດເຈນ. ເຮົາເຂົ້າໃຈດ້ວຍຄວາມກະຈ່າງແຈ້ງທີ່ສົມບູນເຖິງທາດແທ້ຂອງທຸກຄົນ ເຊິ່ງເວົ້າໄດ້ວ່າ ເຮົາເຫັນທະລຸສິ່ງຕ່າງໆທີ່ຄົນມີຢູ່ພາຍໃນຕົວພວກເຂົາຢ່າງຄົບຖ້ວນ. ເຮົາສາມາດເຫັນໄດ້ຢ່າງຊັດເຈນວ່າຄົນໆໜຶ່ງເປັນຄົນຊົ່ວຮ້າຍທີ່ໄຮ້ຢາງອາຍ ຫຼື ຍິງແພດສະຫຍາ ແລະ ເຮົາຮູ້ວ່າໃຜເຮັດຫຍັງຢ່າງລັບໆ. ຢ່າອວດສະເໜ່ຂອງເຈົ້າຕໍ່ໜ້າເຮົາ, ເຈົ້າຜູ້ໜ້າສົມເພດເອີຍ! ອອກໄປຈາກບ່ອນນີ້ດຽວນີ້! ສະນັ້ນ ເພື່ອຫຼີກຫຼ່ຽງບໍ່ໃຫ້ນຳເອົາຄວາມອັບອາຍມາສູ່ນາມຂອງເຮົາ, ເຮົາບໍ່ໃຊ້ຄົນແບບນັ້ນ! ພວກເຂົາບໍ່ສາມາດເປັນພະຍານໃຫ້ແກ່ນາມຂອງເຮົາໄດ້ ແລະ ກົງກັນຂ້າມ ພວກເຂົາຕໍ່ຕ້ານເພື່ອບໍ່ໃຫ້ເກີດຜົນ ແລະ ນຳເອົາຄວາມອັບອາຍມາສູ່ຄອບຄົວຂອງເຮົາ! ພວກເຂົາຈະຖືກຂັບໄລ່ອອກຈາກເຮືອນຂອງເຮົາທັນທີ. ເຮົາບໍ່ຕ້ອງການພວກເຂົາ. ເຮົາຈະບໍ່ທົນຕໍ່ຄວາມລ້າຊ້າແມ່ນແຕ່ວິນາທີດຽວ! ສຳລັບຄົນເຫຼົ່ານັ້ນ, ບໍ່ວ່າພວກເຂົາສະແຫວງຫາແນວໃດກໍຕາມມັນກໍບໍ່ມີປະໂຫຍດ ເພາະວ່າໃນອານາຈັກຂອງເຮົາ ທຸກຄົນບໍລິສຸດ ແລະ ບໍ່ມີມົນທິນແຕ່ຢ່າງໃດເລີຍ. ຖ້າເຮົາກ່າວວ່າເຮົາບໍ່ຕ້ອງການຜູ້ໃດຜູ້ໜຶ່ງ ແລະ ນັ້ນລວມເຖິງຄົນຂອງເຮົາເອງ ແລ້ວເຮົາກໍໝາຍຄວາມວ່າແນວນັ້ນ; ຢ່າຖ້າໃຫ້ເຮົາປ່ຽນໃຈເລີຍ. ເຮົາບໍ່ສົນວ່າເມື່ອກ່ອນເຈົ້າດີກັບເຮົາສໍ່າໃດ!

ເຮົາເປີດເຜີຍຄວາມລຶກລັບແກ່ພວກເຈົ້າທຸກມື້. ພວກເຈົ້າຮູ້ຈັກວິທີການເວົ້າຂອງເຮົາບໍ? ແມ່ນຫຍັງຄືພື້ນຖານທີ່ເຮົາເປີດເຜີຍຄວາມລຶກລັບຂອງເຮົາ? ພວກເຈົ້າຮູ້ບໍ? ພວກເຈົ້າມັກເວົ້າວ່າເຮົາແມ່ນພຣະເຈົ້າທີ່ສະໜອງໃຫ້ພວກເຈົ້າຖືກເວລາ, ດັ່ງນັ້ນ ພວກເຈົ້າເຂົ້າໃຈແນວໃດກ່ຽວກັບແງ່ມຸມເຫຼົ່ານີ້? ເຮົາເປີດເຜີຍຄວາມລຶກລັບຂອງເຮົາໃຫ້ແກ່ພວກເຈົ້າເທື່ອລະຂໍ້ໂດຍສອດຄ່ອງກັບບາດກ້າວພາລະກິດຂອງເຮົາ ແລະ ເຮົາສະໜອງໃຫ້ພວກເຈົ້າໂດຍສອດຄ່ອງກັບແຜນການຂອງເຮົາ ແລະ ຍິ່ງໄປກວ່ານັ້ນແມ່ນສອດຄ່ອງກັບວຸດທິພາວະຕົວຈິງຂອງພວກເຈົ້າ (ເມື່ອໃດກໍຕາມທີ່ກ່າວເຖິງການສະໜອງຂອງເຮົາ, ມັນກໍແມ່ນໝາຍເຖິງທຸກໆຄົນໃນອານາຈັກ). ວິທີການເວົ້າຂອງເຮົາເປັນເຊັ່ນນີ້: ສຳລັບຄົນທີ່ຢູ່ໃນເຮືອນຂອງເຮົານັ້ນເຮົາມອບຄວາມສະບາຍໃຈ, ເຮົາສະໜອງໃຫ້ແກ່ພວກເຂົາ ແລະ ເຮົາພິພາກສາພວກເຂົາ; ສຳລັບຊາຕານນັ້ນ ເຮົາບໍ່ສະແດງຄວາມເມດຕາແມ່ນແຕ່ໜ້ອຍເລີຍ ແລະ ທັງໝົດແມ່ນຄວາມໂກດຮ້າຍ ແລະ ການເຜົາໄໝ້. ເຮົາຈະໃຊ້ບົດບັນຍັດການປົກຄອງຂອງເຮົາເພື່ອຂັບໄລ່ຜູ້ທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ ຫຼື ບໍ່ໄດ້ຖືກເລືອກອອກຈາກເຮືອນຂອງເຮົາເທື່ອລະຄົນ. ບໍ່ຈຳເປັນຕ້ອງຮູ້ສຶກກັງວົນໃຈ. ຫຼັງຈາກທີ່ເຮົາເຮັດໃຫ້ພວກເຂົາເປີດເຜີຍລັກສະນະເດີມຂອງພວກເຂົາ (ຫຼັງຈາກທີ່ພວກເຂົາໃຫ້ການບໍລິການແກ່ລູກຊາຍຂອງເຮົາເມື່ອຈຸດຈົບມາເຖິງ), ພວກເຂົາຈະກັບຄືນສູ່ຂຸມເລິກ ຫຼື ບໍ່ດັ່ງນັ້ນເຮົາຈະບໍ່ມີວັນເຮັດໃຫ້ເລື່ອງນີ້ຢຸດ ແລະ ເຮົາຈະບໍ່ປ່ອຍວາງ. ຄົນມັກກ່າວເຖິງນະຮົກ ແລະ ດິນແດນມໍລະນາ. ແຕ່ຄຳເວົ້າສອງຄຳນີ້ໝາຍເຖິງຫຍັງ ແລະ ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງພວກມັນ? ພວກມັນໝາຍເຖິງບາງມຸມທີ່ໜາວເຢັນ ແລະ ມືດມົວບໍ? ຈິດໃຈມະນຸດຂັດຂວາງການຄຸ້ມຄອງຂອງ

ເຮົາຢູ່ສະເໝີ ໂດຍຄິດວ່າການໄຕ່ຕອງທີ່ແລ້ວແຕ່ເວັນແຕ່ກຳຂອງພວກເຂົາເອງດີເລີດແທ້ໆ! ແຕ່ສິ່ງເຫຼົ່ານີ້ບໍ່ມີຫຍັງເລີຍ ນອກຈາກຈິນຕະນາການຂອງພວກເຂົາເອງ. ທັງດິນແດນມໍລະນາ ແລະ ນະຣົກໝາຍເຖິງວິຫານແຫ່ງຄວາມສົກກະປົກທີ່ຊາຕານ ຫຼື ວິນຍານຊົ່ວຮ້າຍໄດ້ອາໄສຢູ່ກ່ອນໜ້ານີ້. ໝາຍຄວາມວ່າ ໃຜກໍຕາມທີ່ຖືກຊາຕານ ຫຼື ວິນຍານຊົ່ວຮ້າຍຄອບຄອງມາກ່ອນ ມັນແມ່ນພວກເຂົາທີ່ເປັນດິນແດນມໍລະນາ ແລະ ມັນແມ່ນພວກເຂົາທີ່ເປັນນະຣົກ, ບໍ່ມີຂໍ້ຜິດພາດໃດໆ! ນີ້ແມ່ນເຫດຜົນທີ່ເຮົາໄດ້ກ່າວຊໍ້າໆໃນອະດີດວ່າເຮົາບໍ່ອາໄສຢູ່ໃນວິຫານທີ່ສົກກະປົກ. ເຮົາ (ພຣະເຈົ້າເອງ) ຈະສາມາດອາໄສຢູ່ໃນດິນແດນມໍລະນາ ຫຼື ໃນນະຣົກໄດ້ບໍ? ນັ້ນຈະບໍ່ແມ່ນເລື່ອງໄຮ້ສາລະທີ່ເປັນຕາຫົວບໍ? ເຮົາໄດ້ເວົ້າເລື່ອງນີ້ຫຼາຍຄັ້ງແລ້ວ ແຕ່ພວກເຈົ້າຍັງບໍ່ເຂົ້າໃຈສິ່ງທີ່ເຮົາໝາຍເຖິງ. ເມື່ອປຽບທຽບກັບນະຣົກ, ດິນແດນມໍລະນາຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮ້າຍແຮງຫຼາຍກວ່າ. ຜູ້ທີ່ມີໄວ້ສຳລັບດິນແດນມໍລະນາແມ່ນກໍລະນີທີ່ຮ້າຍແຮງທີ່ສຸດ ແລະ ເຮົາພຽງແຕ່ບໍ່ໄດ້ກຳນົດຄົນເຫຼົ່ານີ້ໄວ້ລ່ວງໜ້າ; ຜູ້ທີ່ມີໄວ້ສຳລັບນະຣົກແມ່ນບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ຕໍ່ມາກໍຖືກກຳຈັດ. ເວົ້າງ່າຍໆກໍ່ຄື ເຮົາບໍ່ໄດ້ເລືອກຄົນເຫຼົ່ານີ້ແມ່ນແຕ່ຄົນດຽວ.

ຜູ້ຄົນມັກສະແດງຕົວວ່າເປັນຜູ້ຊ່ຽວຊານທີ່ເຂົ້າໃຈພຣະທຳຂອງເຮົາຢ່າງຜິດໆ. ຖ້າເຮົາບໍ່ໄດ້ຊີ້ໃຫ້ເຫັນຢ່າງຊັດເຈນ ແລະ ຊີ້ແຈງສິ່ງຕ່າງໆເທື່ອລະໜ້ອຍ, ມີໃຜໃນພວກເຈົ້າທີ່ຈະເຂົ້າໃຈ? ແມ່ນແຕ່ພຣະທຳທີ່ເຮົາກ່າວ, ພວກເຈົ້າກໍເຊື່ອພຽງແຕ່ເຄິ່ງໜຶ່ງ, ບໍ່ຕ້ອງເວົ້າເຖິງສິ່ງຕ່າງໆທີ່ບໍ່ໄດ້ຖືກກ່າວເຖິງມາກ່ອນ. ປັດຈຸບັນນີ້ ການຂັດແຍ້ງພາຍໃນໄດ້ເລີ່ມຕົ້ນຂຶ້ນໃນທຸກປະເທດ: ຄົນງານຂັດແຍ້ງກັນກັບຫົວໜ້າ, ນັກຮຽນກັບອາຈານ, ພົນລະເມືອງກັບເຈົ້າໜ້າທີ່ລັດຖະບານ ແລະ ກິດຈະກຳທັງໝົດເຊັ່ນນີ້ທີ່ກໍ່ໃຫ້ເກີດຄວາມບໍ່ສະຫງົບກໍເກີດຂຶ້ນກ່ອນໝູ່ໃນທຸກປະເທດ ແລະ ນີ້ເປັນພຽງສ່ວນໜຶ່ງຂອງການບໍລິການທີ່ຖືກມອບໃຫ້ເຮົາ. ແລ້ວເປັນຫຍັງເຮົາຈຶ່ງເວົ້າວ່າການບໍລິການຖືກມອບໃຫ້ແກ່ເຮົາຜ່ານສິ່ງເຫຼົ່ານີ້? ເຮົາມີຄວາມສຸກໃນຄວາມໂຊກຮ້າຍຂອງຜູ້ຄົນບໍ? ເຮົານັ່ງໂດຍບໍ່ສົນໃຈບໍ? ແນ່ນອນວ່າບໍ່! ເພາະນີ້ແມ່ນການທີ່ຊາຕານກຳລັງຮ້ອງກາກໃສ່ຄວາມເຈັບປວດປາງຕາຍຂອງມັນ ແລະ ຈຸດປະສົງຂອງສິ່ງເຫຼົ່ານີ້ທັງໝົດແມ່ນເພື່ອຄວບຄຸມສິ່ງທີ່ບໍ່ດີໃຫ້ເຮັດໜ້າທີ່ເປັນຕົວປະກອບສຳລັບອຳນາດຂອງເຮົາ ແລະ ສຳລັບການກະທຳອັນໜ້າອັດສະຈັນຂອງເຮົາ. ທັງໝົດເປັນປະຈັກພະຍານທີ່ໜັກແໜ້ນເຊິ່ງເປັນພະຍານໃຫ້ເຮົາ ແລະ ເປັນອາວຸດເພື່ອໂຈມຕີຊາຕານ. ພຽງແຕ່ເມື່ອທຸກປະເທດໃນໂລກຕໍ່ສູ້ເພື່ອດິນແດນ ແລະ ອິດທິພົນ, ລູກຊາຍກົກຂອງເຮົາ ແລະ ເຮົາກໍປົກຄອງເປັນກະສັດຮ່ວມກັນ ແລະ ຈັດການກັບພວກເຂົາ ແລະ ມັນຢູ່ເໜືອຈິນຕະນາການຂອງພວກເຂົາທີ່ຢູ່ພາຍໃຕ້ສະພາບແວດລ້ອມທີ່ໜ້າສົມເພດເຫຼົ່ານີ້ຢ່າງແນ່ນອນ, ອານາຈັກຂອງເຮົາຖືກເຮັດໃຫ້ກາຍເປັນຈິງຢ່າງທີ່ສຸດທ່າມກາງມະນຸດ. ຍິ່ງໄປກວ່ານັ້ນ, ເມື່ອພວກເຂົາຍາດຊິງອຳນາດ ແລະ ຕ້ອງການທີ່ຈະຕັດສິນຄົນອື່ນ, ຄົນອື່ນກໍຕັດສິນພວກເຂົາ ແລະ ພວກເຂົາຖືກເຜົາໄໝ້ດ້ວຍຄວາມໂກດຮ້າຍຂອງເຮົາ, ຊ່າງໜ້າເວດທະນາແທ້! ໜ້າເວດທະນາແທ້! ອານາຈັກຂອງເຮົາຖືກເຮັດໃຫ້ກາຍເປັນຈິງທ່າມກາງມະນຸດ, ນີ້ຊ່າງເປັນເຫດການທີ່ມີສະຫງ່າລາສີແທ້!

ການເປັນມະນຸດ (ບໍ່ວ່າຈະເປັນຄົນໃນອານາຈັກຂອງເຮົາ ຫຼື ລູກຫຼານຂອງຊາຕານ), ພວກເຈົ້າທຸກຄົນຕ້ອງເຫັນການກະທຳອັນໜ້າອັດສະຈັນຂອງເຮົາ, ບໍ່ດັ່ງນັ້ນ ເຮົາກໍຈະບໍ່ມີວັນຢຸດເລື່ອງນີ້. ເຖິງແມ່ນວ່າເຈົ້າເຕັມໃຈທີ່ຈະຍອມຮັບການພິພາກສາຂອງເຮົາກໍຕາມ, ມັນກໍຈະເປັນໄປບໍ່ໄດ້ທີ່ເຈົ້າບໍ່ໄດ້ເຫັນການກະທຳທີ່ໜ້າອັດສະຈັນຂອງເຮົາ. ທຸກຄົນຕ້ອງເຊື່ອໝັ້ນດ້ວຍໃຈ, ດ້ວຍຄຳເວົ້າ ແລະ ດ້ວຍສາຍຕາ ແລະ ບໍ່ສາມາດປ່ອຍຜູ້ໃດໄປຢ່າງງ່າຍໆໄດ້. ທຸກຄົນຕ້ອງມອບຄວາມສະຫງ່າລາສີໃຫ້ແກ່ເຮົາ. ໃນທີ່ສຸດ ເຮົາເຖິງກັບຈະເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ລຸກຂຶ້ນ ແລະ ສັນລະເສີນເຮົາສຳລັບໄຊຊະນະຂອງເຮົາ. ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ, ເຈົ້າຈະຈື່ມັນບໍ? ທຸກຄົນຕ້ອງສັນລະເສີນເຮົາຢ່າງບໍ່ສິ້ນສຸດ ແລະ ມອບຄວາມສະຫງ່າລາສີໃຫ້ແກ່ເຮົາ!

# ບົດທີ 91

ພຣະວິນຍານຂອງເຮົາກ່າວ ແລະ ເປັ່ງສຽງຂອງເຮົາຢູ່ຢ່າງສະໝ່ຳສະເໝີ, ມີຈັກຄົນທ່າມກາງພວກເຈົ້າທີ່ສາມາດຮູ້ຈັກເຮົາໄດ້? ເປັນຫຍັງເຮົາຈຶ່ງຕ້ອງກາຍເປັນເນື້ອໜັງ ແລະ ມາຢູ່ທ່າມກາງພວກເຈົ້າ? ນີ້ແມ່ນຄວາມລຶກລັບທີ່ຍິ່ງໃຫຍ່. ພວກເຈົ້າຄິດເຖິງເຮົາ ແລະ ປາຖະໜາເຮົາໝົດມື້ ແລະ ເຈົ້າສັນລະເສີນເຮົາ, ຊື່ນຊົມເຮົາ, ກິນ ແລະ ດື່ມຈາກເຮົາທຸກໆມື້, ແຕ່ມື້ນີ້ ພວກເຈົ້າຍັງບໍ່ຮູ້ຈັກເຮົາ. ພວກເຈົ້າຊ່າງບໍ່ມີຄວາມຮູ້ ແລະ ຕາບອດແທ້! ພວກເຈົ້າຊ່າງຮູ້ຈັກເຮົາໜ້ອຍແທ້! ມີຈັກຄົນໃນພວກເຈົ້າທີ່ສາມາດຄຳນຶງເຖິງຄວາມປະສົງຂອງເຮົາ? ນັ້ນກໍຄື ມີຈັກຄົນໃນພວກເຈົ້າທີ່ສາມາດຮູ້ຈັກເຮົາໄດ້? ພວກເຈົ້າທຸກຄົນລ້ວນແລ້ວແຕ່ເປັນຄົນປະເພດທີ່ຊົ່ວຮ້າຍ, ແຕ່ພວກເຈົ້າກໍຍັງຕ້ອງການເຮັດຕາມຄວາມປະສົງຂອງເຮົາບໍ? ລືມໄປເສຍ! ເຮົາຂໍບອກເຈົ້າວ່າ: ບໍ່ວ່າການກະທຳຂອງຊາຕານຈະດີພຽງໃດ, ພວກມັນແມ່ນມີເຈດຕະນາເພື່ອທຳລາຍການກໍ່ສ້າງຂອງເຮົາ ແລະ ເພື່ອຂັດຂວາງການຄຸ້ມຄອງຂອງເຮົາ. ບໍ່ວ່າການກະທຳຂອງມັນຈະດີພຽງໃດກໍຕາມ, ທາດແທ້ຂອງມັນກໍບໍ່ປ່ຽນແປງ, ມັນທ້າທາຍເຮົາ. ເພາະສະນັ້ນ, ຫຼາຍຄົນຈຶ່ງຖືກມືຂອງເຮົາໂຈມຕີໂດຍບໍ່ຮູ້ຕົວ ແລະ ຖືກຂັບໄລ່ອອກຈາກຄອບຄົວຂອງເຮົາໂດຍບໍ່ຮູ້ຕົວ. ປັດຈຸບັນນີ້, ບໍ່ມີແມ່ນແຕ່ສິ່ງດຽວ (ບໍ່ວ່າໃຫຍ່ ຫຼື ນ້ອຍ) ທີ່ຖືກປັ້ນແຕ່ງໂດຍມະນຸດ; ທັງໝົດຢູ່ໃນມືຂອງເຮົາ. ຖ້າບາງຄົນເວົ້າວ່າທຸກສິ່ງຢູ່ພາຍໃຕ້ການຄວບຄຸມຂອງມະນຸດ, ແລ້ວເຮົາກໍຈະເວົ້າວ່າ ເຈົ້າທ້າທາຍເຮົາ ແລະ ແນ່ນອນ ເຮົາຈະຂ້ຽນຕີເຈົ້າຢ່າງຮຸນແຮງ ແລະ ປ່ອຍເຈົ້າ ບໍ່ມີບ່ອນວາງຫົວຂອງເຈົ້າຕະຫຼອດໄປ. ຈາກທຸກເຫດການ ແລະ ທຸກສິ່ງ, ແມ່ນຫຍັງທີ່ບໍ່ໄດ້ຢູ່ພາຍໃນມືຂອງເຮົາ? ແມ່ນຫຍັງທີ່ມືຂອງເຮົາບໍ່ໄດ້ຕັ້ງຂຶ້ນ ຫຼື ບໍ່ໄດ້ຖືກກຳນົດໄວ້ໂດຍເຮົາ? ແລະ ເຈົ້າຍັງເວົ້າເຖິງການຮູ້ຈັກເຮົາຢູ່! ຄຳເວົ້າເຫຼົ່ານີ້ເປັນຄຳເວົ້າທີ່ຊົ່ວຮ້າຍ. ເຈົ້າໄດ້ໂກງຄົນອື່ນ, ດັ່ງນັ້ນເຈົ້າຈຶ່ງຄິດວ່າເຈົ້າສາມາດໂກງເຮົາໄດ້ເຊັ່ນກັນບໍ? ເຈົ້າຄິດວ່າຖ້າບໍ່ມີຄົນຮູ້ສິ່ງທີ່ເຈົ້າໄດ້ເຮັດ, ແລ້ວມັນກໍຈະບໍ່ມີຫຍັງເກີດຂຶ້ນບໍ? ຢ່າຄິດວ່າເຈົ້າຈະຖືກປ່ອຍໄປຢ່າງງ່າຍດາຍ! ເຮົາຕ້ອງເຮັດໃຫ້ເຈົ້າຄຸເຂົ່າລົງຕໍ່ໜ້າເຮົາ ແລະ ເວົ້າມັນອອກມາ. ມັນເປັນທີ່ຍອມຮັບບໍ່ໄດ້ທີ່ຈະບໍ່ເວົ້າ; ນີ້ບົດບັນຍັດການປົກຄອງຂອງເຮົາ!

ພວກເຈົ້າເຂົ້າໃຈແທ້ໆບໍວ່າພຣະວິນຍານຂອງເຮົາແມ່ນໃຜ ແລະ ຕົວຕົນທາງເນື້ອໜັງຂອງເຮົາແມ່ນໃຜ? ຄວາມສຳຄັນຂອງການບັງເກີດເປັນມະນຸດຂອງເຮົາແມ່ນຫຍັງ? ຜູ້ໃດທ່າມກາງພວກເຈົ້າທີ່ໄດ້ໄຕ່ຕອງເລື່ອງຍິ່ງໃຫຍ່ນີ້ຢ່າງຮອບຄອບ ແລະ ໄດ້ຮັບການເປີດເຜີຍບາງຢ່າງຈາກເຮົາ? ພວກເຈົ້າທຸກຄົນຫຼອກຕົວເອງ! ເປັນຫຍັງເຮົາຈຶ່ງເວົ້າວ່າເຈົ້າເປັນລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່? ປັດຈຸບັນນີ້, ເຮົາເປີດເຜີຍຄວາມລຶກລັບແຫ່ງການບັງເກີດເປັນມະນຸດຂອງເຮົາໃຫ້ແກ່ພວກເຈົ້າ ເຊິ່ງເປັນຄວາມລຶກລັບທີ່ມະນຸດບໍ່ສາມາດແກ້ໄດ້ນັບຕັ້ງແຕ່ການສ້າງໂລກ ເຊິ່ງໄດ້ນຳເປົ້າໝາຍຫຼາຍຢ່າງຂອງຄວາມກຽດຊັງຂອງເຮົາມາເພື່ອທຳລາຍ. ແລະ ມັນກໍເປັນມື້ນີ້. ຍ້ອນເນື້ອໜັງຂອງເຮົາ, ຫຼາຍຄົນທີ່ເຮົາຮັກໄດ້ຖືກເຮັດໃຫ້ສົມບູນແບບ. ເປັນຫຍັງເຮົາຕ້ອງກາຍເປັນເນື້ອໜັງແທ້ໆ? ແລະ ເປັນຫຍັງເຮົາຈຶ່ງປາກົດຕົວດັ່ງທີ່ເຮົາເຮັດ (ໃນທຸກສິ່ງ, ລວມເຖິງຄວາມສູງ, ຮູບລັກສະນະ, ວຸດທິພາວະຂອງເຮົາ

ແລະ ອື່ນໆອີກ)? ໃຜມີຫຍັງທີ່ຈະເວົ້າກ່ຽວກັບເລື່ອງນັ້ນບໍ? ມີຄວາມສຳຄັນຫຼາຍໃນການບັງເກີດເປັນມະນຸດຂອງເຮົາ ເຊິ່ງມັນບໍ່ສາມາດເວົ້າໄດ້ທັງໝົດ. ຕອນນີ້ ເຮົາຈະບອກພວກເຈົ້າພຽງແຕ່ສ່ວນໜຶ່ງຂອງມັນ (ຕາມຂັ້ນຕອນພາລະກິດຂອງເຮົາຈົນເຮັດໃຫ້ມັນມາໄກປານນີ້, ເຮົາຕ້ອງກະທຳສິ່ງນີ້ ແລະ ກ່າວສິ່ງນີ້): ຫຼັກໆແລ້ວ ການບັງເກີດເປັນມະນຸດຂອງເຮົາແນໃສ່ລູກຊາຍກົກຂອງເຮົາ ເພື່ອວ່າເຮົາອາດລ້ຽງດູພວກເຂົາ ແລະ ເພື່ອວ່າພວກເຂົາຈະສາມາດສົນທະນາ ແລະ ເວົ້າກັບເຮົາຊ່ອງໜ້າໄດ້; ມັນຍິ່ງສະແດງໃຫ້ເຫັນຕື່ມອີກວ່າ ເຮົາ ແລະ ລູກຊາຍກົກຂອງເຮົາມີຄວາມສະໜິດສະໜົມກັນ (ໝາຍຄວາມວ່າພວກເຮົາກິນນຳກັນ, ຢູ່ນຳກັນ, ດຳລົງຊີວິດຮ່ວມກັນ ແລະ ປະຕິບັດງານຮ່ວມກັນ), ເພື່ອວ່າພວກເຂົາອາດຈະຖືກເຮົາລ້ຽງດູຈາກເຮົາໃນຄວາມເປັນຈິງ, ສິ່ງເຫຼົ່ານີ້ບໍ່ແມ່ນພຣະທຳທີ່ວ່າງເປົ່າ ແຕ່ແມ່ນຄວາມເປັນຈິງ. ກ່ອນໜ້ານີ້, ຄົນເຊື່ອໃນເຮົາ ແຕ່ບໍ່ສາມາດເຂົ້າໃຈຄວາມເປັນຈິງໄດ້ ແລະ ນີ້ກໍຍ້ອນວ່າເຮົາຍັງບໍ່ທັນໄດ້ບັງເກີດເປັນມະນຸດເທື່ອ. ປັດຈຸບັນນີ້, ການບັງເກີດເປັນມະນຸດຂອງເຮົາອະນຸຍາດໃຫ້ພວກເຈົ້າທຸກຄົນເຂົ້າໃຈຄວາມເປັນຈິງ ແລະ ອະນຸຍາດຜູ້ທີ່ຮັກເຮົາຢ່າງຈິງໃຈໃຫ້ຮູ້ຈັກເຮົາ ຜູ້ເປັນພຣະເຈົ້າທີ່ມີສະຕິປັນຍາ ຜ່ານການເວົ້າ ແລະ ພຶດຕິກຳຂອງເຮົາ ແລະ ຫຼັກການທີ່ຢູ່ເບື້ອງຫຼັງວິທີການທີ່ເຮົາຈັດການເລື່ອງຕ່າງໆ. ມັນຍັງອະນຸຍາດໃຫ້ບັນດາຜູ້ທີ່ບໍ່ສະແຫວງຫາເຮົາຢ່າງຈິງໃຈໄດ້ເຫັນການກະທຳທີ່ເບິ່ງບໍ່ເຫັນຂອງເຮົາໃນແງ່ມຸມຂອງເຮົານັ້ນກໍຄືຄວາມເປັນມະນຸດຂອງເຮົາ ແລະ ດັ່ງນັ້ນຈຶ່ງທ້າທາຍເຮົາ ແລະ ຕໍ່ມາກໍຕາຍໂດຍ "ບໍ່ມີເຫດຜົນຫຍັງເລີຍ", ຖືກມືຂອງເຮົາໂຈມຕີ. ເພື່ອເຮັດໃຫ້ຊາຕານອັບອາຍ, ການບັງເກີດເປັນມະນຸດເປັນພະຍານທີ່ດັງກ້ອງກັງວານທີ່ສຸດໃຫ້ແກ່ເຮົາ; ບໍ່ພຽງແຕ່ເຮົາສາມາດອອກມາຈາກເນື້ອໜັງໄດ້ເທົ່ານັ້ນ, ແຕ່ເຮົາຍັງສາມາດມີຊີວິດຢູ່ພາຍໃນເນື້ອໜັງອີກດ້ວຍ. ເຮົາບໍ່ທົນທຸກຕໍ່ຂໍ້ຈຳກັດດ້ານມິຕິ ແລະ ພູມີສາດ; ສຳລັບເຮົາແລ້ວ ບໍ່ມີສິ່ງກີດຂວາງຫຍັງ ແລະ ທຸກສິ່ງໄຫຼວຽນຢ່າງລາບລື່ນ. ມັນແມ່ນໃນສິ່ງນີ້ທີ່ເຮັດໃຫ້ຊາຕານອັບອາຍຂາຍໜ້າທີ່ສຸດ ແລະ ເມື່ອເຮົາອອກມາຈາກເນື້ອໜັງ, ເຮົາກໍຍັງປະຕິບັດພາລະກິດໃນເນື້ອໜັງຂອງເຮົາ ແລະ ເຮົາບໍ່ໄດ້ຮັບຜົນກະທົບຫຍັງເລີຍ. ເຮົາຍັງຄົງກ້າວຂ້າມພູ, ແມ່ນ້ຳ, ທະເລສາບ ແລະ ທຸກມຸມຂອງຈັກກະວານພ້ອມທັງສິ່ງຕ່າງໆທີ່ຢູ່ພາຍໃນນັ້ນອີກດ້ວຍ. ເຮົາໄດ້ບັງເກີດເປັນມະນຸດເພື່ອເປີດເຜີຍທຸກຄົນທີ່ເກີດມາຈາກເຮົາ ແຕ່ໄດ້ລຸກຂຶ້ນມາທ້າທາຍເຮົາ. ຖ້າເຮົາບໍ່ກາຍເປັນເນື້ອໜັງ, ມັນກໍຈະບໍ່ມີທາງທີ່ຈະເປີດເຜີຍພວກເຂົາໄດ້ (ໝາຍເຖິງບັນດາຜູ້ທີ່ເຮັດແບບໜຶ່ງຕໍ່ໜ້າເຮົາ ແລະ ອີກແບບໜຶ່ງຢູ່ລັບຫຼັງເຮົາ). ຖ້າເຮົາຍັງຄົງເປັນພຣະວິນຍານຢູ່, ຄົນກໍຈະນະມັດສະການເຮົາໃນແນວຄິດຂອງພວກເຂົາ ແລະ ຈະຄິດວ່າ ເຮົາແມ່ນພຣະເຈົ້າທີ່ບໍ່ມີຮູບຮ່າງ ແລະ ບໍ່ສາມາດເຂົ້າເຖິງໄດ້. ການບັງເກີດເປັນມະນຸດຂອງເຮົາໃນປັດຈຸບັນນີ້ ຂ້ອນຂ້າງກົງກັນຂ້າມກັບແນວຄິດຂອງຜູ້ຄົນ (ເວົ້າເຖິງຄວາມສູງ ແລະ ຮູບລັກສະນະຂອງເຮົາ) ເນື່ອງຈາກວ່າພຣະອົງເບິ່ງຄືວ່າທຳມະດາ ແລະ ບໍ່ໄດ້ສູງຫຼາຍ. ມັນແມ່ນປະເດັນນີ້ທີ່ເຮັດໃຫ້ຊາຕານອັບອາຍຂາຍໜ້າຫຼາຍທີ່ສຸດ ແລະ ເປັນຕົວຕໍ່ຕ້ານທີ່ມີອຳນາດທີ່ສຸດຕໍ່ແນວຄິດຂອງຜູ້ຄົນ (ການໝິ່ນປະໝາດຂອງຊາຕານ). ຖ້າຮູບລັກສະນະຂອງເຮົາແຕກຕ່າງຈາກຄົນອື່ນໆ, ນັ້ນກໍຈະເປັນບັນຫາ, ທຸກຄົນກໍຈະມານະມັດສະການເຮົາ ແລະ ເຂົ້າໃຈເຮົາຜ່ານແນວຄິດຂອງຕົນເອງ ແລະ ພວກເຂົາ

ຈະບໍ່ສາມາດເປັນພະຍານທີ່ງົດງາມໃຫ້ເຮົາໄດ້. ສະນັ້ນ, ເຮົາຈຶ່ງນຳໃຊ້ພາບລັກທີ່ເຮົາມີໃນວັນນີ້ ເຊິ່ງບໍ່ຍາກທີ່ຈະເຂົ້າໃຈເລີຍ. ທຸກຄົນຄວນກ້າວອອກຈາກແນວຄິດຂອງມະນຸດ ແລະ ບໍ່ຖືກຫຼອກລວງ ໂດຍກົນອຸບາຍທີ່ເລ່ລ່ຽມຂອງຊາຕານ. ໃນອະນາຄົດ ເຮົາຈະບອກພວກເຈົ້າຕື່ມອີກເທື່ອລະສ່ວນ ຕາມຄວາມຕ້ອງການຂອງພາລະກິດຂອງເຮົາ.

ປັດຈຸບັນນີ້ ພາລະກິດອັນຍິ່ງໃຫຍ່ຂອງເຮົາໄດ້ປະສົບຜົນສຳເລັດ ແລະ ແຜນການຂອງເຮົາກໍ ສຳເລັດແລ້ວ. ເຮົາໄດ້ຮັບຄົນກຸ່ມໜຶ່ງທີ່ຮ່ວມມືກັບເຮົາດ້ວຍໃຈທີ່ເປັນໜຶ່ງດຽວ ແລະ ສາມັກຄີກັນ. ນີ້ເປັນຊ່ວງເວລາທີ່ມີສະຫງ່າລາສີທີ່ສຸດສຳລັບເຮົາ. ລູກຊາຍທີ່ຮັກຂອງເຮົາ (ທຸກຄົນທີ່ຮັກເຮົາ) ສາມາດ ເປັນຈິດໜຶ່ງໃຈດຽວກັນກັບເຮົາໃນການເຮັດສຳເລັດທຸກສິ່ງທີ່ເຮົາຕ້ອງເຮັດຮ່ວມກັນກັບເຮົາ. ນີ້ແມ່ນ ສິ່ງມະຫັດສະຈັນ. ຫຼັງຈາກມື້ນີ້ໄປ, ຄົນທີ່ເຮົາຖືວ່າບໍ່ເປັນທີ່ຮັກຈະບໍ່ມີພາລະກິດຂອງພຣະວິນຍານ ບໍລິສຸດ, ໝາຍຄວາມວ່າ ເຮົາຈະປະຖິ້ມຜູ້ທີ່ບໍ່ສອດຄ່ອງກັບສິ່ງທີ່ເຮົາກ່າວໃນອະດີດ. ຜູ້ຄົນຕ້ອງ ສອດຄ່ອງກັບສິ່ງທີ່ເຮົາກ່າວຢ່າງສົມບູນ. ຈົ່ງຈື່ຈຳສິ່ງນີ້ໄວ້! ເຈົ້າຕ້ອງສອດຄ່ອງຢ່າງສົມບູນ. ຢ່າເຂົ້າໃຈ ຜິດ; ທຸກສິ່ງຂຶ້ນຢູ່ກັບເຮົາ. ຄົນເອີຍ, ຢ່າເວົ້າເຖິງເງື່ອນໄຂກັບເຮົາ. ຖ້າເຮົາເວົ້າວ່າເຈົ້າມີຄຸນສົມບັດ, ແລ້ວມັນກໍຈະຖືກຂຽນໄວ້ໃນແຜ່ນຫີນ; ຖ້າເຮົາເວົ້າວ່າເຈົ້າບໍ່ມີຄຸນສົມບັດ, ຢ່າເບິ່ງຄືວ່າເຈັບປວດ ແລະ ໂຫດສະຫວັນ ແລະ ແຜ່ນດິນໂລກເລີຍ. ມັນແມ່ນການຈັດແຈງຂອງເຮົາທັງໝົດ. ໃຜເວົ້າວ່າເຈົ້າ ຄວນດູໝິ່ນຕົວເອງ? ໃຜເວົ້າວ່າເຈົ້າຄວນກະທຳຄວາມໂງ່ຈ້າທີ່ໜ້າອັບອາຍນັ້ນ? ເຖິງແມ່ນວ່າເຈົ້າບໍ່ ໄດ້ເວົ້າຫຍັງ, ເຈົ້າກໍບໍ່ສາມາດປິດບັງຄວາມຈິງຈາກເຮົາໄດ້. ພຣະທຳຂອງເຮົາມີຄວາມໝາຍສຳລັບໃຜ ເມື່ອເຮົາເວົ້າວ່າເຮົາແມ່ນພຣະເຈົ້າຜູ້ກວດສອບສ່ວນເລິກທີ່ສຸດໃນຫົວໃຈຂອງມະນຸດ? ເຮົາກ່າວມັນ ກັບຄົນທີ່ບໍ່ຊື່ສັດ. ຊ່າງໄຮ້ຢາງອາຍແທ້, ເຮັດສິ່ງດັ່ງກ່າວລັບຫຼັງເຮົາ! ເຈົ້າຕ້ອງການທີ່ຈະລວງຕາເຮົາບໍ? ມັນບໍ່ໄດ້ງ່າຍປານນັ້ນ! ອອກໄປຈາກບ່ອນນີ້ດຽວນີ້ເສຍ! ບຸດແຫ່ງຄວາມກະບົດເອີຍ! ເຈົ້າບໍ່ຮັກຕົວເອງ ແລະ ເຈົ້າບໍ່ເຄົາລົບຕົວເອງ! ເຈົ້າບໍ່ສົນໃຈຕົວເອງ ແຕ່ເຈົ້າຍັງຢາກໃຫ້ເຮົາຮັກເຈົ້າບໍ? ລືມໄປເສຍ! ເຮົາບໍ່ຕ້ອງການຄົນໜ້າເວດທະນາໃນລັກສະນະດັ່ງກ່າວແມ່ນແຕ່ຄົນດຽວ. ພວກເຈົ້າທຸກຄົນຈົ່ງໜີໄປ ໄກໆຈາກເຮົາ! ນີ້ນຳເອົາຄວາມອັບອາຍທີ່ຮ້າຍແຮງທີ່ສຸດມາສູ່ນາມຂອງເຮົາ; ຖ້າພວກເຈົ້າບໍ່ເຫັນສິ່ງນີ້ ຢ່າງຊັດເຈນ ມັນຈະບໍ່ມີຜົນຫຍັງເລີຍ. ເຈົ້າຕ້ອງປົກປ້ອງຕົວເອງຈາກການຖືກເຮັດໃຫ້ເປື້ອນໝອງ ດ້ວຍສິ່ງສົກກະປົກໃດໆໃນຍຸກເກົ່າທີ່ຊົ່ວຮ້າຍ ແລະ ສໍ່າສ່ອນນີ້; ເຈົ້າຕ້ອງບໍລິສຸດ ແລະ ບໍ່ມີມົນທິນ ຢ່າງສົມບູນ. ປັດຈຸບັນນີ້, ຄົນທີ່ມີຄຸນສົມບັດທີ່ຈະປົກຄອງເປັນກະສັດຮ່ວມກັບເຮົາ ແມ່ນຜູ້ທີ່ບໍ່ໄດ້ ຖືກເຮັດໃຫ້ເປື້ອນໝອງດ້ວຍຄວາມສົກກະປົກໃດໆ ເພາະວ່າເຮົາແມ່ນພຣະເຈົ້າຜູ້ບໍລິສຸດ ແລະ ເຮົາບໍ່ ຕ້ອງການຜູ້ໃດທີ່ເຮັດໃຫ້ນາມຂອງເຮົາອັບອາຍ. ຄົນເຊັ່ນນັ້ນຖືກຊາຕານສົ່ງມາເມື່ອທົດສອບເຮົາ ແລະ ແນ່ນອນວ່າພວກເຂົາທັງໝົດແມ່ນພັກພວກຂອງຊາຕານທີ່ຕ້ອງຖືກໂຈມຕີຄືນ (ໂຍນພວກເຂົາລົງຖິ້ມ ໃນຂຸມເລິກທີ່ບໍ່ສິ້ນສຸດ).

ຄອບຄົວຂອງເຮົາບໍລິສຸດ ແລະ ບໍ່ມີມົນທິນ ແລະ ພຣະວິຫານຂອງເຮົາກໍງົດງາມ ແລະ ສະຫງ່າ ຜ່າເຜີຍ (ໝາຍເຖິງຜູ້ທີ່ມີສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີ). ໃຜກ້າເຂົ້າໄປ ແລະ ສ້າງບັນຫາໄດ້ຕາມໃຈ

ຂອງພວກເຂົາ? ເຮົາຈະບໍ່ໃຫ້ອະໄພພວກເຂົາຢ່າງແນ່ນອນ. ພວກເຂົາຈະຕ້ອງຖືກທຳລາຍຢ່າງສິ້ນເຊີງ ແລະ ຖືກເຮັດໃຫ້ລະອາຍໃຈເປັນຢ່າງຍິ່ງ. ເຮົາກະທຳຢ່າງສະຫຼາດ. ເຮົາເອົາຊະນະຜູ້ທີ່ທ້າທາຍເຮົາ ແລະ ເຮັດໃຫ້ນາມຂອງເຮົາອັບອາຍຢ່າງສິ້ນເຊີງ ໂດຍປາສະຈາກດາບ, ປາສະຈາກປືນ ແລະ ໂດຍບໍ່ຕ້ອງຍົກນິ້ວມືຂຶ້ນ. ເຮົາເປັນຄົນໃຈກວ້າງ ແລະ ເຮົາສືບຕໍ່ພາລະກິດຂອງເຮົາດ້ວຍຈັງຫວະທີ່ໝັ້ນຄົງ ແມ່ນແຕ່ເມື່ອຊາຕານລົບກວນຈົນເຖິງຂອບເຂດດັ່ງກ່າວ; ເຮົາກໍບໍ່ສົນໃຈມັນ ແລະ ເຮົາຈະເອົາຊະນະມັນດ້ວຍຄວາມສຳເລັດຂອງແຜນການຄຸ້ມຄອງຂອງເຮົາ. ນີ້ແມ່ນລິດອຳນາດຂອງເຮົາ ແລະ ສະຕິປັນຍາຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ມັນເປັນສ່ວນນ້ອຍໆຂອງຄວາມສະຫງ່າລາສີທີ່ບໍ່ສິ້ນສຸດຂອງເຮົາ. ໃນສາຍຕາຂອງເຮົາ, ຄົນທີ່ທ້າທາຍເຮົາເປັນຄືກັບແມງໄມ້ທີ່ເລືອຢູ່ໃນດິນທີ່ເຮົາສາມາດຢຽບໃຫ້ຕາຍໃຕ້ຕີນຕາມເຈດຕະນາຂອງເຮົາໄດ້ຕະຫຼອດເວລາ. ຢ່າງໃດກໍຕາມ, ເຮົາກະທຳສິ່ງຕ່າງໆດ້ວຍສະຕິປັນຍາ. ເຮົາຈະໃຫ້ລູກຊາຍກົກຂອງເຮົາຈັດການພວກເຂົາ; ເຮົາບໍ່ໄດ້ຟ້າວ. ເຮົາກະທຳຢ່າງມີແບບແຜນ, ຕາມລັກສະນະທີ່ເປັນລະບົບລະບຽບ ແລະ ບໍ່ມີຂໍ້ຜິດພາດແມ່ນແຕ່ໜ້ອຍເລີຍ. ບັນດາລູກຊາຍກົກທີ່ເກີດມາຈາກເຮົາຄວນມີສິ່ງທີ່ເຮົາເປັນ ແລະ ສາມາດເຫັນສະຕິປັນຍາອັນບໍ່ສິ້ນສຸດຂອງເຮົາໃນການກະທຳຂອງເຮົາ!

# ບົດທີ 92

ທຸກຄົນສາມາດເຫັນຄວາມຊົງລິດທານຸພາບສູງສຸດຂອງເຮົາ ແລະ ສະຕິປັນຍາຂອງເຮົາໃນພຣະທຳຂອງເຮົາ ແລະ ການກະທຳຂອງເຮົາ. ບໍ່ວ່າເຮົາຈະໄປບ່ອນໃດກໍຕາມ, ພາລະກິດຂອງເຮົາກໍຢູ່ບ່ອນນັ້ນ. ຮອຍພຣະບາດຂອງເຮົາບໍ່ໄດ້ຢູ່ພຽງແຕ່ປະເທດຈີນເທົ່ານັ້ນ; ສິ່ງທີ່ສຳຄັນໄປກວ່ານັ້ນແມ່ນພວກມັນຢູ່ໃນທຸກຊົນຊາດທົ່ວໂລກ. ຢ່າງໃດກໍຕາມ, ຜູ້ທຳອິດທີ່ໄດ້ຮັບຊື່ນີ້ແມ່ນເຈັດປະເທດທີ່ໄດ້ສົນທະນາກັນກ່ອນໜ້ານີ້ເທົ່ານັ້ນ ເພາະວ່ານີ້ແມ່ນລຳດັບພາລະກິດຂອງເຮົາ; ໃນອະນາຄົດອັນໃກ້ນີ້, ພວກເຈົ້າຈະມີຄວາມກະຈ່າງແຈ້ງຫຼາຍກ່ຽວກັບເລື່ອງນີ້, ເຂົ້າໃຈມັນຢ່າງຖີ່ຖ້ວນ. ຖ້າເຮົາບອກພວກເຈົ້າຕອນນີ້ເຮົາຢ້ານວ່າ ຄົນສ່ວນໃຫຍ່ຈະລົ້ມລົງຕາມມາ ເພາະເຮົາໄດ້ກ່າວໄວ້ກ່ອນແລ້ວວ່າເຮົາກ່າວກັບພວກເຈົ້າ ແລະ ເປົ້າສຽງຂອງເຮົາກັບພວກເຈົ້າຕາມວຸດທິພາວະຂອງພວກເຈົ້າ ແລະ ທຸກສິ່ງທີ່ເຮົາເຮັດແມ່ນມີສະຕິປັນຍາບໍ່ສິ້ນສຸດຂອງເຮົາຢູ່ພາຍໃນສິ່ງນັ້ນ ເຊິ່ງບໍ່ມີໃຜສາມາດຢັ່ງຮູ້ໄດ້; ວິທີດຽວຄືບອກພວກເຈົ້າເປັນຊຸດ. ຈົ່ງຮູ້ສິ່ງນີ້ໄວ້! ໃນສາຍຕາຂອງເຮົາ ພວກເຈົ້າເປັນເດັກນ້ອຍຕະຫຼອດໄປ; ໃນທຸກບາດກ້າວທີ່ເຈົ້າຍ່າງ, ເຈົ້າຕ້ອງຖືກເຮົານຳພາ ແລະ ແນະນຳ. ຄົນເອີຍ, ພຽງແຕ່ຢູ່ພາຍໃຕ້ການນຳທາງຂອງເຮົາເທົ່ານັ້ນ ເຈົ້າຈຶ່ງສາມາດມີຊີວິດຢູ່ຕະຫຼອດຊີວິດຂອງເຈົ້າ; ຫາກບໍ່ມີມັນແລ້ວ ບໍ່ມີໃຜຈະສາມາດມີຊີວິດຢູ່ຕໍ່ໄດ້. ໂລກຈັກກະວານທັງໝົດຢູ່ໃນມືຂອງເຮົາ, ແຕ່ເຈົ້າບໍ່ທັນເຫັນເຮົາຮ້ອນຮົນເທື່ອ. ກົງກັນຂ້າມ, ເຮົາຜ່ອນຄາຍ ແລະ ມີຄວາມສຸກ. ຜູ້ຄົນບໍ່ຮູ້ຈັກຄວາມຊົງລິດທານຸພາບສູງສຸດຂອງເຮົາ ແລະ ຈະຮູ້ສຶກເປັນກັງວົນໃຈກັບເຮົາ, ເຈົ້າຊ່າງຮູ້ຈັກຕົວເອງໜ້ອຍແທ້! ເຈົ້າຍັງໂອ້ອວດສິ່ງເລັກນ້ອຍທີ່ໄຮ້ຄ່າຂອງເຈົ້າຕໍ່ໜ້າເຮົາ ໂດຍຊົມເຊີຍຕົວເອງ! ເຮົາເບິ່ງທະລຸສິ່ງນີ້ມາດົນແລ້ວ. ເຈົ້າມີສ່ວນຮ່ວມໃນການລໍ້ລວງຕໍ່ໜ້າເຮົາ, ເຈົ້າຄົນຊົ່ວທີ່ໜ້າລັງກຽດເອີຍ! ຈົ່ງອອກໄປຈາກເຮືອນຂອງເຮົາດຽວນີ້! ເຮົາບໍ່ຕ້ອງການສິ່ງຊົ່ວຮ້າຍແບບເຈົ້າ. ເຮົາບໍ່ຢາກໃຫ້ໃຜໃນອານາຈັກຂອງເຮົາເປັນຄືພວກເຈົ້າ ຄົນຊົ່ວທີ່ໜ້າລັງກຽດເອີຍ! ເຈົ້າຮູ້ບໍວ່າເຮົາຢຸດປະຕິບັດພາລະກິດໃນຕົວເຈົ້າແລ້ວ, ເຖິງແມ່ນຈະມີຂໍ້ແທ້ຈິງທີ່ວ່າເຈົ້າຍັງກິນ ແລະ ແຕ່ງຕົວຕາມປົກກະຕິກໍຕາມ? ແຕ່ເຈົ້າຮູ້ບໍວ່າເຈົ້າກຳລັງມີຊີວິດຢູ່ເພື່ອຊາຕານ ແລະ ເຈົ້າກຳລັງໃຫ້ບໍລິການແກ່ຊາຕານຢູ່? ແຕ່ເຈົ້າກໍຍັງໜ້າດ້ານທີ່ຈະຢືນຢູ່ຕໍ່ໜ້າເຮົາ! ເຈົ້າຊ່າງໄຮ້ຢາງອາຍແທ້ໆ!

ໃນອະດີດ ເຮົາເວົ້າເລື້ອຍໆວ່າ "ໄພພິບັດອັນຍິ່ງໃຫຍ່ຈະມາເຖິງໃນໄວໆນີ້; ໄພພິບັດອັນຍິ່ງໃຫຍ່ໄດ້ຕົກລົງຈາກມືຂອງເຮົາແລ້ວ". "ໄພພິບັດອັນຍິ່ງໃຫຍ່" ໝາຍເຖິງຫຍັງ ແລະ ຄຳວ່າ "ຕົກລົງ" ນີ້ຄວນຖືກອະທິບາຍແນວໃດ? ພວກເຈົ້າຄິດວ່າໄພພິບັດອັນຍິ່ງໃຫຍ່ເຫຼົ່ານີ້ໝາຍເຖິງໄພພິບັດທີ່ບໍ່ສາມາດຫຼີບໜີໄດ້ ເຊິ່ງທຳຮ້າຍຈິດໃຈ, ວິນຍານ ແລະ ຮ່າງກາຍຂອງມະນຸດ ແລະ ເຈົ້າຄິດວ່າ "ແຜ່ນດິນໄຫວ, ຄວາມອຶດຢາກ ແລະ ໂລກລະບາດ" ທີ່ເຮົາເວົ້າເຖິງແມ່ນໄພພິບັດອັນຍິ່ງໃຫຍ່ເຫຼົ່ານີ້. ແຕ່ພວກເຈົ້າບໍ່ຮູ້ວ່າພວກເຈົ້າໄດ້ຕີຄວາມໝາຍພຣະທຳຂອງເຮົາຜິດໄປ. ພວກເຈົ້າຄິດວ່າ "ຕົກລົງ" ນີ້ໝາຍຄວາມວ່າໄພພິບັດອັນຍິ່ງໃຫຍ່ໄດ້ເລີ່ມຂຶ້ນແລ້ວ, ນີ້ຊ່າງເປັນຕາຢາກຫົວແທ້! ນີ້ແມ່ນວິທີທີ່ພວກເຈົ້າເຂົ້າໃຈມັນຢ່າງແນ່ນອນ ແລະ ເມື່ອໄດ້ຍິນຄຳອະທິບາຍຂອງພວກເຈົ້າ, ເຮົາໃຈຮ້າຍແທ້ໆ. ຄວາມລຶກລັບທີ່ຜູ້ຄົນ

ບໍ່ເຄີຍສາມາດເປີດເຜີຍນັ້ນ (ເຊິ່ງແມ່ນຄວາມລຶກລັບທີ່ລີ້ລັບທີ່ສຸດ) ຍັງເປັນສິ່ງທີ່ຖືກຕີຄວາມໝາຍຜິດຢ່າງຮ້າຍແຮງທີ່ສຸດໃນທຸກຍຸກທຸກສະໄໝອີກດ້ວຍ ແລະ ມັນແມ່ນຄວາມລຶກລັບທີ່ບໍ່ມີໃຜໄດ້ມີປະສົບການສ່ວນຕົວ (ເພາະວ່າມັນຖືກນໍາອອກມາພຽງແຕ່ໃນຍຸກສຸດທ້າຍເທົ່ານັ້ນ ແລະ ມີແຕ່ໃນຍຸກສຸດທ້າຍເທົ່ານັ້ນມະນຸດຈຶ່ງສາມາດເຫັນມັນໄດ້ ເຖິງແມ່ນວ່າພວກເຂົາຈະບໍ່ຮັບຮູ້ມັນກໍຕາມ), ຍ້ອນວ່າເຮົາຜະລຶກມັນໄວ້ແໜ້ນທີ່ສຸດ, ຈົນມະນຸດຈຶ່ງບໍ່ສາມາດເຈາະມັນໄດ້ (ແມ່ນແຕ່ຈະໄດ້ເຫັນສ່ວນທີ່ນ້ອຍທີ່ສຸດຂອງມັນ). ປັດຈຸບັນນີ້ ເມື່ອພາລະກິດຂອງເຮົາໄດ້ຖືກດໍາເນີນມາຮອດຂັ້ນຕອນນີ້, ເຮົາສ່ອງສະຫວ່າງພວກເຈົ້າຕາມຄວາມຕ້ອງການຂອງພາລະກິດຂອງເຮົາ; ບໍ່ດັ່ງນັ້ນ ຜູ້ຄົນກໍຈະບໍ່ມີທາງເຂົ້າໃຈໄດ້. ປັດຈຸບັນນີ້ ເຮົາເລີ່ມສົນທະນາ; ທຸກຄົນຄວນເອົາໃຈໃສ່ ເພາະວ່າໃຜກໍຕາມທີ່ບໍ່ລະມັດລະວັງລວມເຖິງລູກຊາຍກົກຂອງເຮົາ ກໍຈະທົນທຸກກັບການພິພາກສາຂອງເຮົາ ແລະ ໃນກໍລະນີທີ່ຮ້າຍແຮງທີ່ສຸດ ພວກເຂົາຈະຖືກມືຂອງເຮົາໂຈມຕີໃຫ້ລົ້ມລົງ (ເຊິ່ງໝາຍຄວາມວ່າ ຈິດໃຈ, ວິນຍານ ແລະ ຮ່າງກາຍຂອງພວກເຂົາຈະຖືກເອົາຈາກໄປ). ໄພພິບັດອັນຍິ່ງໃຫຍ່ໄດ້ຖືກກ່າວເຖິງໂດຍກ່ຽວຂ້ອງກັບບົດບັນຍັດການປົກຄອງທຸກຂໍ້ແຫ່ງອານາຈັກຂອງເຮົາ ແລະ ບົດບັນຍັດການປົກຄອງຂອງເຮົາທຸກຂໍ້ແມ່ນສ່ວນໜຶ່ງຂອງໄພພິບັດອັນຍິ່ງໃຫຍ່ຕ່າງໆ. (ບົດບັນຍັດການປົກຄອງຂອງເຮົາບໍ່ໄດ້ຖືກເປີດເຜີຍໃຫ້ແກ່ພວກເຈົ້າທັງໝົດ, ແຕ່ຢ່າເປັນຫ່ວງ ຫຼື ຮູ້ສຶກກັງວົນໃຈກ່ຽວກັບເລື່ອງນີ້ເລີຍ; ມີບາງສິ່ງທີ່ຈະເຮັດໃຫ້ພວກເຈົ້າໄດ້ຮັບຜົນປະໂຫຍດເລັກນ້ອຍ ຫາກພວກເຈົ້າມາຮູ້ຈັກພວກມັນໄວເກີນໄປ. ຈົ່ງຈື່ສິ່ງນີ້ໄວ້! ເຮົາແມ່ນພຣະເຈົ້າທີ່ມີສະຕິປັນຍາ). ດັ່ງນັ້ນ, ພາກສ່ວນອື່ນໆແມ່ນຫຍັງ? ໄພພິບັດອັນຍິ່ງໃຫຍ່ປະກອບດ້ວຍສອງພາກສ່ວນຄື: ບົດບັນຍັດການປົກຄອງຂອງເຮົາ ແລະ ຄວາມໂກດຮ້າຍຂອງເຮົາ. ເວລາທີ່ໄພພິບັດອັນຍິ່ງໃຫຍ່ມາເຖິງຈະເປັນເວລາທີ່ເຮົາເລີ່ມໂກດແຄ້ນ ແລະ ບັງຄັບໃຊ້ບົດບັນຍັດການປົກຄອງຂອງເຮົາອີກດ້ວຍ. ໃນທີ່ນີ້, ເຮົາບອກແກ່ລູກຊາຍກົກຂອງເຮົາວ່າ: ພວກເຈົ້າຕ້ອງບໍ່ເສື່ອມສະພາບເນື່ອງຈາກສິ່ງນີ້. ເຈົ້າລືມໄປແລ້ວບໍວ່າທຸກສິ່ງ ແລະ ທຸກເລື່ອງໄດ້ຖືກເຮົາກໍານົດໄວ້ລ່ວງໜ້າແລ້ວ? ລູກຊາຍເອີຍ, ຢ່າຢ້ານກົວເລີຍ! ເຮົາຈະປົກປ້ອງເຈົ້າຢ່າງແນ່ນອນ; ເຈົ້າຈະຊື່ນຊົມພອນທີ່ດີກັບເຮົາຕະຫຼອດໄປ ແລະ ຈະຢູ່ຮ່ວມກັບເຮົາຕະຫຼອດໄປເປັນນິດ. ຍ້ອນວ່າເຈົ້າແມ່ນຄົນທີ່ເຮົາຮັກ, ເຮົາຈະບໍ່ປະຖິ້ມເຈົ້າ. ເຮົາບໍ່ເຮັດສິ່ງທີ່ໂງ່ຈ້າ, ແຕ່ຖ້າເຮົາທໍາລາຍສິ່ງທີ່ຖືກເຮັດສໍາເລັດຢ່າງລໍາບາກນັ້ນລົງ ເຮົາບໍ່ໄດ້ກໍາລັງຍິງຕີນຕົວເອງບໍ? ເຮົາຮູ້ສິ່ງທີ່ເຈົ້າຄິດຢູ່ໃນໃຈເຈົ້າ. ເຈົ້າຈື່ສິ່ງນີ້ໄດ້ບໍ? ເຈົ້າຈະໃຫ້ເຮົາເວົ້າຫຍັງອີກ? ເຮົາຈະເວົ້າຕື່ມກ່ຽວກັບໄພພິບັດທີ່ຍິ່ງໃຫຍ່. ເມື່ອໄພພິບັດທີ່ຍິ່ງໃຫຍ່ມາເຖິງ, ມັນຈະເປັນເວລາທີ່ເປັນຕາຢ້ານທີ່ສຸດ ແລະ ພວກມັນຈະເປີດເຜີຍຄວາມຂີ້ຮ້າຍຂອງມະນຸດໃນລະດັບທີ່ສູງສຸດ. ໃບໜ້າຜີຮ້າຍທຸກຊະນິດຈະຖືກເປີດໂປງໃນແສງສະຫວ່າງຂອງໃບໜ້າເຮົາ ແລະ ພວກມັນຈະບໍ່ມີບ່ອນໃຫ້ລີ້, ບໍ່ມີບ່ອນໃຫ້ຊອກຫາແນວປິດ; ພວກມັນຈະຖືກເປີດໂປງແທ້ໆ. ຜົນກະທົບຂອງໄພພິບັດອັນຍິ່ງໃຫຍ່ຈະເຮັດໃຫ້ທຸກຄົນທີ່ບໍ່ແມ່ນຜູ້ທີ່ເຮົາເລືອກ ແລະ ກໍານົດໄວ້ລ່ວງໜ້າຄຸເຂົ່າລົງຕໍ່ໜ້າເຮົາ ແລະ ຮ້ອງຂໍການໃຫ້ອະໄພ ພ້ອມທັງຮ້ອງໄຫ້ ແລະ ກັດແຂ້ວ. ນີ້ແມ່ນການພິພາກສາຂອງເຮົາຕໍ່ຊາຕານ ເຊິ່ງແມ່ນການພິພາກສາທີ່ໂກດຮ້າຍຂອງເຮົາ. ໃນປັດຈຸບັນນີ້ ເຮົາໄດ້ມີສ່ວນຮ່ວມໃນ

ພາລະກິດນີ້ ແລະ ບາງທີ ມີບາງຄົນທີ່ທຳທ່າວ່າມີຄຸນວຸດທິ ແລະ ຫຼອກວ່າເຮັດສຳເລັດ; ຍິ່ງພວກເຂົາເຮັດແບບນັ້ນຫຼາຍເທົ່າໃດ, ຊາຕານຍິ່ງຈະປະຕິບັດພາລິດໃນຕົວພວກເຂົາຫຼາຍຂຶ້ນເທົ່ານັ້ນ, ຈົນກວ່າຈະເຖິງຈຸດໜຶ່ງທີ່ລັກສະນະເດີມຂອງພວກເຂົາຖືກເປີດເຜີຍ.

ເຮົາບໍ່ຟ້າວທີ່ຈະປະຕິບັດພາລະກິດຂອງເຮົາ ແລະ ເຮົາປັ້ນແຕ່ງທຸກຄົນດ້ວຍຕົວເຮົາເອງ (ນີ້ເປັນການເຍາະເຍີ້ຍພວກເຂົາ ໂດຍພິສູດວ່າພວກເຂົາແມ່ນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ເຮົາບໍ່ສົນໃຈພວກເຂົາ, ດັ່ງນັ້ນ ມັນບໍ່ໄດ້ເກີນໄປທີ່ຈະໃຊ້ຄຳວ່າ "ປັ້ນແຕ່ງ") ແລະ ເຮັດທຸກການກະທຳດ້ວຍຕົວເຮົາເອງ. ທຸກສິ່ງປະສົບຜົນສຳເລັດຍ້ອນເຮົາ ແລະ ມັນຄືຄວາມສຳເລັດທີ່ປອດໄພ ແລະໝັ້ນຄົງ; ທຸກສິ່ງທີ່ເຮົາກະທຳໄດ້ຖືກຈັດແຈງໄວ້ແລ້ວເປັນຂັ້ນເປັນຕອນ. ເຮົາບອກຄວາມປະສົງຂອງເຮົາ ແລະ ພາລະຂອງເຮົາແກ່ພວກເຈົ້າເທື່ອລະໜ້ອຍ. ນັບແຕ່ຈຸດນີ້ໄປ, ພຣະທຳຂອງເຮົາເລີ່ມປາກົດຕົວແກ່ທຸກຊົນຊາດ ແລະ ທຸກຄົນ. ຍ້ອນວ່າລູກຊາຍກົກຂອງເຮົາໄດ້ຖືກເຮັດໃຫ້ສົມບູນເປັນທີ່ແບບຮຽບຮ້ອຍແລ້ວ (ພຣະທຳຂອງເຮົາແນໃສ່ລູກຊາຍຂອງເຮົາ ແລະ ຄົນຂອງເຮົາ). ວິທີທີ່ເຮົາປະຕິບັດພາລະກິດໄດ້ເລີ່ມຂຶ້ນອີກຄັ້ງເພື່ອປ່ຽນແປງ. ເຈົ້າເຫັນສິ່ງນີ້ຢ່າງຊັດເຈນບໍ? ພວກເຈົ້າຮູ້ສຶກໄດ້ເຖິງນໍ້າສຽງຂອງພຣະທຳຂອງເຮົາໃນສອງສາມມື້ທີ່ຜ່ານມານີ້ບໍ? ເຮົາປອບໃຈລູກຊາຍກົກຂອງເຮົາທຸກບາດກ້າວທີ່ໃນວິທີ, ແຕ່ຈາກນີ້ໄປ (ຍ້ອນວ່າລູກຊາຍກົກຂອງເຮົາໄດ້ຖືກເຮັດໃຫ້ສົມບູນແບບເປັນທີ່ຮຽບຮ້ອຍແລ້ວ), ເຮົາຖືມີດໄວ້ໃນມືຂອງເຮົາ ("ມີດ" ໝາຍເຖິງ "ຄຳເວົ້າທີ່ຮຸນແຮງທີ່ສຸດ"). ໃຜກໍຕາມທີ່ເຮົາຖືວ່າບໍ່ເປັນທີ່ຊົມຊອບໃນຊົ່ວໄລຍະໜຶ່ງ (ນີ້ໝາຍເຖິງຜູ້ທີ່ບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າ ຫຼືຖືກເລືອກ ແລະ ເພາະສະນັ້ນຈຶ່ງບໍ່ມີຂໍ້ໂຕ້ແຍ້ງ), ເຮົາບໍ່ສົນວ່າພວກເຂົາໃຫ້ບໍລິການແກ່ເຮົາ ຫຼື ຖ້າວ່າພວກເຂົາເປັນຢ່າງອື່ນ; ເຮົາຈະຖິ້ມພວກເຂົາທັນທີ. ເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ ແລະເຮົາສາມາດເຮັດໃຫ້ທຸກຄົນໃຫ້ບໍລິການແກ່ເຮົາໄດ້. ເຮົາບໍ່ສະໝັກໃຈທີ່ຈະມີສ່ວນຮ່ວມກັບຄົນເຊັ່ນນີ້ເລີຍ; ຖ້າເຮົາເວົ້າວ່າເຮົາບໍ່ຕ້ອງການພວກເຂົາ ແລ້ວເຮົາກໍບໍ່ຕ້ອງການພວກເຂົາ. ດຽວນີ້ ເວລານີ້ໄດ້ມາເຖິງ, ເຮົາຕ້ອງການພຽງແຕ່ເຫັນຄົນທີ່ເຮັດໃຫ້ເຮົາບໍ່ພໍໃຈເທົ່ານັ້ນ ແລະ ເຮົາຈະປະຖິ້ມພວກເຂົາທັນທີໂດຍບໍ່ມີການກວດສອບ ເພາະວ່າເຮົາແມ່ນພຣະເຈົ້າທີ່ຮັກສາຄຳເວົ້າຂອງຕົນເອງ. ສຳລັບບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າວ່າຈະຕ້ອງຢູ່ໃນການຮັບໃຊ້ຂອງເຮົາ, ບໍ່ວ່າເຈົ້າຈະດີປານໃດກໍຕາມ, ບໍ່ວ່າເຈົ້າໄດ້ເຮັດສິ່ງໃດທີ່ທ້າທາຍເຮົາ, ຖ້າເຈົ້າເຮັດໃຫ້ເຮົາບໍ່ພໍໃຈ, ເຮົາກໍຈະເຕະເຈົ້າອອກເສຍ. ເຮົາບໍ່ຢ້ານບັນຫາໃນອະນາຄົດ. ເຮົາມີບົດບັນຍັດການປົກຄອງຂອງເຮົາ, ເຮົາຮັກສາຄຳເວົ້າຂອງເຮົາ ແລະພຣະທຳຂອງເຮົາຈະສຳເລັດລົງ. ເຮົາຈະປ່ອຍໃຫ້ຊາຕານຍັງຢູ່ບໍ? ຄົນເອີຍ ຈົ່ງຟັງເຮົາ! ພວກເຈົ້າບໍ່ຈຳເປັນຕ້ອງຢ້ານ; ເຈົ້າຕ້ອງອອກໄປເມື່ອໃດກໍຕາມທີ່ເຮົາຂໍໃຫ້ເຈົ້າອອກໄປ. ຢ່າແກ້ຕົວກັບເຮົາ; ເຮົາບໍ່ມີພຣະທຳຫຍັງຈະເວົ້າກັບເຈົ້າ! ເພາະວ່າເຮົາໄດ້ໃຊ້ຄວາມອົດທົນເຊັ່ນນັ້ນ ແລະ ເວລາທີ່ຈະບັງຄັບໃຊ້ບົດບັນຍັດການປົກຄອງຂອງເຮົາໄດ້ມາເຖິງແລ້ວ ແລະ ມື້ສຸດທ້າຍຂອງພວກເຈົ້າກໍຢູ່ບ່ອນນີ້ດ້ວຍ. ນັບເປັນເວລາຫຼາຍພັນປີທີ່ພວກເຈົ້າເສເພ ແລະ ເຮັດສິ່ງຕ່າງໆຢ່າງຫົວແຂງ, ຢ່າງຫົວດື້ຢູ່ສະເໝີ, ແຕ່ເຮົາກໍທົນຢູ່ສະເໝີ (ເນື່ອງຈາກເຮົາເປັນຄົນໃຈກວ້າງ ແລະ ອະນຸຍາດໃຫ້ຄວາມເສື່ອມຊາມຂອງ

ເຈົ້າມີຢູ່ຈົນເຖິງຂອບເຂດໃດໜຶ່ງ). ແຕ່ປັດຈຸບັນນີ້, ວັນສິ້ນສຸດຄວາມເມດຕາປານີຂອງເຮົາມາເຖິງແລ້ວ ແລະ ເວລາໄດ້ມາເຖິງເພື່ອພວກເຈົ້າຈະຖືກຄອບງຳ ແລະ ຖືກໂຍນລົງທະເລສາບແຫ່ງໄຟ ແລະ ມາດ. ຈົ່ງຮີບຮ້ອນ ແລະ ອອກໄປໃຫ້ພົ້ນທາງ. ເຮົາເລີ່ມບັງຄັບໃຊ້ການພິພາກສາຂອງເຮົາຢ່າງເປັນທາງການ ແລະ ເຮົາຈະເລີ່ມປົດປ່ອຍຄວາມໂກດຮ້າຍຂອງເຮົາ.

ໃນທຸກຊົນຊາດ ແລະ ທຸກແຫ່ງຫົນທົ່ວໂລກ, ແຜ່ນດິນໄຫວ, ໄພອຶດຢາກ, ໂລກລະບາດ ແລະ ໄພພິບັດທຸກປະເພດເກີດຂຶ້ນເລື້ອຍໆ. ໃນຂະນະທີ່ເຮົາປະຕິບັດພາລະກິດອັນຍິ່ງໃຫຍ່ຂອງເຮົາໃນທຸກຊົນຊາດ ແລະ ທຸກແຫ່ງຫົນ, ໄພພິບັດເຫຼົ່ານີ້ຈະເກີດຂຶ້ນພ້ອມກັບຄວາມຮ້າຍແຮງຫຼາຍກວ່າເວລາອື່ນໆນັບຕັ້ງແຕ່ການຊົງສ້າງໂລກ. ນີ້ແມ່ນການເລີ່ມຕົ້ນຂອງການພິພາກສາຂອງເຮົາຕໍ່ທຸກຄົນ, ແຕ່ລູກຊາຍຂອງເຮົາສາມາດພັກຜ່ອນໄດ້ຢ່າງງ່າຍດາຍ; ໄພພິບັດຈະບໍ່ເກີດຂຶ້ນກັບພວກເຈົ້າ ແລະ ເຮົາຈະປົກປ້ອງພວກເຈົ້າ. (ນີ້ໝາຍຄວາມວ່າ ຫຼັງຈາກນີ້ ພວກເຈົ້າຈະມີຊີວິດຢູ່ໃນຮ່າງກາຍ ແຕ່ບໍ່ແມ່ນໃນເນື້ອໜັງ, ດັ່ງນັ້ນ ເຈົ້າຈະບໍ່ທົນທຸກກັບຄວາມເຈັບປວດຂອງໄພພິບັດໃດໆ). ເຈົ້າພຽງແຕ່ຈະປົກຄອງເປັນກະສັດ ແລະ ພິພາກສາທຸກຊົນຊາດ ແລະ ທຸກຄົນຮ່ວມກັນກັບເຮົາ, ຊື່ນຊົມພອນທີ່ດີຮ່ວມກັບເຮົາຕະຫຼອດໄປໃນຈັກກະວານ ແລະ ຈົນສຸດປາຍແຜ່ນດິນໂລກ. ພຣະທຳເຫຼົ່ານີ້ຈະຖືກບັນລຸທັງໝົດ ແລະ ພວກມັນຈະຖືກບັນລຸຕໍ່ໜ້າຕໍ່ຕາພວກເຈົ້າໃນໄວໆນີ້. ເຮົາບໍ່ຊັກຊ້າແມ່ນແຕ່ຊົ່ວໂມງດຽວ ຫຼື ແມ່ນແຕ່ມື້ດຽວ; ເຮົາກະທຳສິ່ງຕ່າງໆໂດຍໄວຢ່າງບໍ່ໜ້າເຊື່ອ. ຢ່າເປັນຫ່ວງ ຫຼື ກັງວົນໃຈເລີຍ; ພອນທີ່ເຮົາໃຫ້ເຈົ້າແມ່ນບາງສິ່ງທີ່ບໍ່ມີໃຜສາມາດເອົາໄປຈາກເຈົ້າໄດ້, ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ. ທຸກຄົນຈະເຊື່ອຟັງເຮົາ ຍ້ອນການກະທຳຕ່າງໆຂອງເຮົາ; ພວກເຂົາຈະເບີກບານໂດຍບໍ່ຢຸດຢັ້ງ ແລະ ຫຼາຍໄປກວ່ານັ້ນພວກເຂົາຈະໂດດເຕັ້ນດ້ວຍຄວາມປິຕິຍິນດີຢ່າງບໍ່ສິ້ນສຸດ.

# ບົດທີ 93

ຄວາມຈິງໄດ້ສໍາເລັດລົງຕໍ່ໜ້າຕໍ່ຕາຜູ້ຄົນ ແລະ ທຸກສິ່ງໄດ້ສໍາເລັດລົງແລ້ວ; ພາລະກິດຂອງເຮົາດໍາເນີນໄປໄວຂຶ້ນ ແລະ ສູງຂຶ້ນຄືກັບຈະຫຼວດທີ່ຖືກຍິງຂຶ້ນເທິງຟ້າ. ບໍ່ມີໃຜເຄີຍຄາດຄິດສິ່ງນີ້ມາກ່ອນເລີຍ. ພາຍຫຼັງທີ່ສິ່ງຕ່າງໆເກີດຂຶ້ນເທົ່ານັ້ນ ພວກເຈົ້າຈຶ່ງຈະເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທໍາຂອງເຮົາ. ບໍ່ມີຂໍ້ຍົກເວັ້ນສໍາລັບລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ພວກເຂົາຕ້ອງຖືກເຮັດໃຫ້ເປັນພະຍານເຖິງການກະທໍາອັນໜ້າອັດສະຈັນຂອງເຮົາດ້ວຍຕາຂອງພວກເຂົາເອງ. ຢ່າຄິດວ່າເຮົາຈະບໍ່ປະຖິ້ມເຈົ້າ ຍ້ອນເຈົ້າໝັ້ນໃຈໃນຕົວເຮົາຫຼັງຈາກທີ່ໄດ້ເຫັນການກະທໍາຂອງເຮົາ. ມັນບໍ່ໄດ້ງ່າຍປານນັ້ນ! ແນ່ນອນ ເຮົາຈະເຮັດໃຫ້ພຣະທໍາທີ່ເຮົາກ່າວ ແລະ ເຫດການຕ່າງໆທີ່ເຮົາໄດ້ຕັດສິນໃຈເຮັດເກີດເປັນຈິງ ແລະ ພວກມັນຈະບໍ່ກັບມາຫາເຮົາໂດຍວ່າງເປົ່າ. ໃນປະເທດຈີນ, ນອກຈາກຊົນເຜົ່າກຸ່ມນ້ອຍທີ່ເປັນລູກຊາຍກົກຂອງເຮົາ ມີໜ້ອຍຄົນທີ່ເປັນຄົນຂອງເຮົາ. ດັ່ງນັ້ນ ມື້ນີ້ເຮົາກ່າວກັບພວກເຈົ້າ (ລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ທີ່ໄດ້ຂົ່ມເຫັງເຮົາຢ່າງໂຫດຮ້າຍທີ່ສຸດ) ຢ່າງແຈ່ມແຈ້ງວ່າພວກເຈົ້າຕ້ອງບໍ່ຍຶດຕິດກັບຄວາມຫວັງອັນຍິ່ງໃຫຍ່ໃດໆ ເພາະວ່າຈຸດສຸມຂອງພາລະກິດຂອງເຮົາ (ນັບແຕ່ການຊົງສ້າງໂລກ) ໄດ້ສຸມໃສ່ກັບບັນດາລູກຊາຍກົກຂອງເຮົາ ແລະ ນອກຈາກປະເທດຈີນກໍຍັງມີອີກສອງສາມປະເທດອີກດ້ວຍ. ດ້ວຍເຫດນີ້, ຄວາມປະສົງຂອງເຮົາຈະບັນລຸຜົນເມື່ອລູກຊາຍກົກຂອງເຮົາເຕີບໃຫຍ່ຂຶ້ນ. (ເມື່ອລູກຊາຍກົກຂອງເຮົາໃຫຍ່ຂຶ້ນ ທຸກສິ່ງຈະສໍາເລັດລົງ ຍ້ອນວ່າວຽກງານໃນຕໍ່ໜ້າໄດ້ຖືກມອບໝາຍໃຫ້ແກ່ພວກເຂົາແລ້ວ). ປັດຈຸບັນນີ້ ເຮົາອະນຸຍາດໃຫ້ຄົນເຫຼົ່ານີ້ເຫັນສ່ວນໜຶ່ງຂອງການກະທໍາອັນໜ້າອັດສະຈັນຂອງເຮົາ ເພື່ອພຽງເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ໄດ້ຮັບຄວາມອັບອາຍ. ຄົນເຫຼົ່ານີ້ແມ່ນບໍ່ສາມາດມີຄວາມສຸກໄດ້, ແຕ່ພວກເຂົາພຽງດີໃຈທີ່ໄດ້ໃຫ້ການບໍລິການແກ່ເຮົາເທົ່ານັ້ນ. ພວກເຂົາບໍ່ມີທາງເລືອກ ເພາະວ່າເຮົາມີກົດບັນຍັດແຫ່ງການບໍລິຫານ ແລະ ບໍ່ມີໃຜກ້າລະເມີດມັນ.

ບັດນີ້ເຮົາຈະສົນທະນາກ່ຽວກັບບາງສະຖານະການທີ່ກ່ຽວຂ້ອງກັບການມາຂອງຄົນຕ່າງຊາດເພື່ອວ່າພວກເຈົ້າຈະໄດ້ຮູ້ລ່ວງໜ້າ, ກຽມທຸກຢ່າງໃຫ້ຖືກຕ້ອງເພື່ອເປັນພະຍານຕໍ່ນາມຂອງເຮົາ ແລະໄປຢືນຢູ່ເໜືອພວກເຂົາ ແລະ ປົກຄອງພວກເຂົາ. (ເຮົາກ່າວວ່າ "ຢືນຢູ່ເໜືອພວກເຂົາ ແລະ ປົກຄອງພວກເຂົາ" ຍ້ອນວ່າຜູ້ທີ່ຍິ່ງໃຫຍ່ທີ່ສຸດໃນທ່າມກາງພວກເຂົາ ຍັງເປັນຜູ້ທີ່ຕໍ່າຕ້ອຍທີ່ສຸດໃນທ່າມກາງພວກເຈົ້າອີກດ້ວຍ). ຄົນເຫຼົ່ານີ້ລ້ວນແລ້ວແຕ່ໄດ້ຮັບການເປີດເຜີຍຂອງພຣະວິນຍານບໍລິສຸດ ແລະ ໃນອະນາຄົດ ພວກເຂົາທຸກຄົນກໍຈະຫຼັ່ງໄຫຼກັນເຂົ້າມາໃນປະເທດຈີນ ຄືກັບວ່າໄດ້ມີການຈັດແຈງໄວ້ລ່ວງໜ້າແລ້ວ. ມັງກອນແດງທີ່ຍິ່ງໃຫຍ່ໄດ້ຖືກເຮັດໃຫ້ຕົກໃຈໂດຍບໍ່ຮູ້ເນື້ອຕົວ ແລະ ພະຍາຍາມເຮັດສຸດຄວາມສາມາດເພື່ອຕໍ່ຕ້ານ, ແຕ່ຈົ່ງຈື່ສິ່ງໜຶ່ງໄວ້! ແຜນການຄຸ້ມຄອງຂອງເຮົາໄດ້ປະສົບຜົນສໍາເລັດຢ່າງສົມບູນແລ້ວ, ບໍ່ມີສິ່ງໃດ ແລະ ບໍ່ມີມະນຸດຄົນໃດກ້າທີ່ຈະຂັດຂວາງບາດກ້າວຂອງເຮົາໄດ້. ເຮົາມອບການເປີດເຜີຍໃຫ້ພວກເຂົາຕະຫຼອດເວລາ ແລະ ພວກເຂົາກໍປະຕິບັດຕາມການຊີ້ນໍາຂອງ

ພຣະວິນຍານບໍລິສຸດ. ພວກເຂົາຈະບໍ່ໄດ້ຫົນທຸກທໍລະມານກັບການເປັນທາດຂອງມັງກອນແດງທີ່ຍິ່ງໃຫຍ່ຢ່າງແນ່ນອນ ເພາະວ່າໃນຕົວເຮົາ ທຸກສິ່ງຖືກປົດປ່ອຍ ແລະ ເປັນອິດສະຫຼະ. ເຮົາໄດ້ຈັດຕຽມທຸກສິ່ງຢ່າງເໝາະສົມ, ລໍຖ້າໃຫ້ພວກເຈົ້າກະກຽມວຽກງານໃຫ້ພ້ອມເພື່ອນຳພາພວກເຂົາ. ເຮົາໄດ້ກ່າວເລື່ອງນີ້ມາຕະຫຼອດ ແຕ່ພວກເຈົ້າສ່ວນຫຼາຍເຊື່ອພຽງເຄິ່ງໜຶ່ງເທົ່ານັ້ນ. ແລ້ວຕອນນີ້ເດ? ພວກເຈົ້າຕົກສະເງີ້, ແມ່ນບໍ່?

ສິ່ງເຫຼົ່ານີ້ແມ່ນລ້ວນແລ້ວແຕ່ເປັນສິ່ງສຳຮອງ; ສິ່ງສຳຄັນຄື ພວກເຈົ້າຕ້ອງສຳເລັດການກະກຽມວຽກງານທັງໝົດໃຫ້ໄວເທົ່າທີ່ຈະໄວໄດ້. ບໍ່ຕ້ອງຕົກໃຈ. ຜູ້ທີ່ຈະປະຕິບັດພາລະກິດແມ່ນເຮົາ ແລະເມື່ອຮອດເວລາ ເຮົາຈະປະຕິບັດພາລະກິດດ້ວຍຕົວເຮົາເອງ. ເຮົາໄດ້ທຸບຕີມັງກອນແດງທີ່ຍິ່ງໃຫຍ່ແຕກເປັນເສດສ່ວນແລ້ວ. ເວົ້າໄດ້ວ່າ ພຣະວິນຍານຂອງເຮົາໄດ້ຖອນຕົວອອກຈາກທຸກຄົນ ຍົກເວັ້ນລູກຊາຍກົກຂອງເຮົາ (ແລະ ຕອນນີ້ມັນແມ່ນງ່າຍຂຶ້ນທີ່ຈະເປີດເຜີຍວ່າໃຜຄືລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່). ຄົນເຫຼົ່ານີ້ໄດ້ສຳເລັດການຮັບໃຊ້ແກ່ເຮົາແລ້ວ ແລະ ເຮົາຈະສົ່ງພວກເຂົາກັບຄືນໄປສູ່ຂຸມເລິກທີ່ສຸດ. (ນີ້ໝາຍຄວາມວ່າ ເຮົາຈະບໍ່ໃຊ້ພວກເຂົາອີກ. ນັບແຕ່ນີ້ໄປ ລູກຊາຍກົກຂອງເຮົາຈະຖືກເປີດເຜີຍຢ່າງສົມບູນ ແລະ ຜູ້ທີ່ຢູ່ຄຽງຂ້າງເຮົາ ແລະ ຜູ້ທີ່ເໝາະສົມໃນການຮັບໃຊ້ເຮົາຈະເປັນລູກຊາຍກົກຂອງເຮົາ). ລູກຊາຍກົກຂອງເຮົາເອີຍ, ພວກເຈົ້າຈົ່ງມີຄວາມສຸກກັບພອນທີ່ເຮົາປະທານໃຫ້ພວກເຈົ້າຢ່າງເປັນທາງການເຖີດ (ເພາະວ່າ ຜູ້ທີ່ເຮົາກຽດຊັງທັງໝົດໄດ້ສະແດງທາດແທ້ຂອງພວກເຂົາແລ້ວ) ແລະ ນັບແຕ່ນີ້ເປັນຕົ້ນໄປ ຈະບໍ່ມີການຕໍ່ຕ້ານເຮົາຢ່າງເປີດເຜີຍໃນທ່າມກາງພວກເຈົ້າອີກ. ພວກເຈົ້າມີຄວາມໝັ້ນໃຈກ່ຽວກັບຕົວເຮົາຢ່າງແທ້ຈິງຮ້ອຍເປີເຊັນ. (ສະເພາະມື້ນີ້ເທົ່ານັ້ນທີ່ເລື່ອງນີ້ໄດ້ສຳເລັດລົງ ແລະ ເທື່ອນີ້ເຮົາໄດ້ກຳນົດໄວ້ລ່ວງໜ້າແລ້ວ). ທັງໝົດທີ່ພວກເຈົ້າມີຢູ່ໃນຫົວໃຈ ແລະ ໃນຈິດໃຈຂອງພວກເຈົ້າຄືຄວາມຮັກ ແລະ ຄວາມເຄົາລົບຕໍ່ເຮົາຢ່າງບໍ່ມີວັນສິ້ນສຸດ ແລະ ພວກເຈົ້າສັນລະເສີນເຮົາ ແລະ ມອບສະຫງ່າລາສີໃຫ້ແກ່ເຮົາຕະຫຼອດເວລາ. ພວກເຈົ້າດຳລົງຊີວິດຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຈາກຄວາມຮັກຂອງເຮົາໃນສະຫວັນຊັ້ນທີສາມຢ່າງແທ້ຈິງ. ຊ່າງເບີກບານໃຈ ແລະ ມີຄວາມສຸກທີ່ບໍ່ມີຫຍັງມາປຽບທຽບໄດ້ເລີຍ! ມັນເປັນອີກໂລກໜຶ່ງທີ່ຜູ້ຄົນບໍ່ສາມາດຈິນຕະນາການໄດ້; ເປັນໂລກຝ່າຍວິນຍານທີ່ແທ້ຈິງ!

ໄພພິບັດທັງໝົດເກີດຂຶ້ນຢ່າງຕໍ່ເນື່ອງ, ແຕ່ລະຄັ້ງກໍຮຸນແຮງກວ່າຄັ້ງທີ່ຜ່ານມາ ແລະ ສະຖານະການກໍເຄັ່ງຕຶງຂຶ້ນທຸກມື້. ນີ້ເປັນພຽງການເລີ່ມຕົ້ນຂອງໄພພິບັດເທົ່ານັ້ນ; ໄພພິບັດທີ່ຮຸນແຮງກວ່ານີ້ທີ່ຈະເກີດຂຶ້ນໃນອະນາຄົດແມ່ນເກີນທີ່ມະນຸດຈະສາມາດຈິນຕະນາການໄດ້. ເຮົາຈະປ່ອຍໃຫ້ລູກຊາຍຂອງເຮົາຈັດແຈງພວກມັນ; ນີ້ແມ່ນກົດບັນຍັດແຫ່ງການບໍລິຫານຂອງເຮົາ ແລະ ເຮົາໄດ້ຈັດແຈງມັນໄວ້ດົນນານແລ້ວ. ທຸກໝາຍສຳຄັນ ແລະ ສິ່ງມະຫັດສະຈັນຕ່າງໆທີ່ມະນຸດບໍ່ເຄີຍເຫັນມາກ່ອນຈະເກີດຂຶ້ນຈາກເຮົາ ແລະ ປາກົດອອກມາຕາມໆກັນໃຫ້ທຸກຄົນໄດ້ເຫັນ (ໝາຍເຖິງທຸກຄົນໃນອານາຈັກຂອງເຮົາ). ແຕ່ນີ້ແມ່ນສິ່ງທີ່ຈະເກີດຂຶ້ນໃນອະນາຄົດອັນໃກ້ນີ້. ຢ່າກັງວົນໃຈໄປເລີຍ. ການເຂົ້າສູ່ອານາຈັກທີ່ທຸກຄົນໄດ້ກ່າວເຖິງນີ້, ແມ່ນຫຍັງຄືສະພາບຂອງການເຂົ້າສູ່ອານາຈັກ? ແລ້ວແມ່ນຫຍັງຄືອານາຈັກ?

ມັນເປັນຕົວເມືອງບໍ? ພວກເຈົ້າເຂົ້າໃຈຜິດແລ້ວ. ອານາຈັກແມ່ນບໍ່ໄດ້ຢູ່ເທິງແຜ່ນດິນໂລກ ຫຼື ຢູ່ໃນທ້ອງຟ້າ, ແຕ່ເປັນໂລກຝ່າຍວິນຍານທີ່ມະນຸດບໍ່ສາມາດເບິ່ງເຫັນ ຫຼື ຈັບຕ້ອງໄດ້. ມີພຽງບັນດາຜູ້ທີ່ຍອມຮັບນາມຂອງເຮົາ, ຜູ້ທີ່ຖືກເຮົາເຮັດໃຫ້ສົມບູນທັງໝົດ ແລະ ໄດ້ຮັບພອນຂອງເຮົາເທົ່ານັ້ນທີ່ຈະສາມາດເຂົ້າສູ່ອານາຈັກນີ້ໄດ້. ໂລກຝ່າຍວິນຍານທີ່ໄດ້ຖືກກ່າວເຖິງເລື້ອຍໆກ່ອນໜ້ານີ້ແມ່ນພາຍນອກຂອງອານາຈັກ. ແຕ່ການເຂົ້າສູ່ອານາຈັກຢ່າງແທ້ຈິງນັ້ນບໍ່ແມ່ນເລື່ອງງ່າຍ. ຜູ້ທີ່ຈະເຂົ້າເຖິງຕ້ອງໄດ້ຮັບຄຳສັນຍາຂອງເຮົາ ແລະ ຕ້ອງເປັນຄົນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ເປັນຄົນທີ່ເຮົາເລືອກດ້ວຍຕົວເຮົາເອງເທົ່ານັ້ນ. ເພາະສະນັ້ນ ໂລກຝ່າຍວິນຍານບໍ່ແມ່ນບ່ອນທີ່ຄົນຈະໄປມາໄດ້ຢ່າງຕາມໃຈ. ຄວາມເຂົ້າໃຈຂອງຄົນກ່ຽວກັບເລື່ອງນີ້ແມ່ນເຄີຍເປັນຄວາມເຂົ້າໃຈແບບຜິວເຜີນຫຼາຍ ແລະ ເປັນພຽງແນວຄວາມຄິດຂອງມະນຸດເທົ່ານັ້ນ. ມີພຽງຜູ້ທີ່ໄດ້ເຂົ້າສູ່ອານາຈັກເທົ່ານັ້ນຈຶ່ງຈະສາມາດໄດ້ຮັບພອນ, ດັ່ງນັ້ນ ບໍ່ພຽງແຕ່ມະນຸດບໍ່ສາມາດໄດ້ຮັບພອນເຫຼົ່ານີ້ເທົ່ານັ້ນ, ແຕ່ຍິ່ງໄປກວ່ານັ້ນ ເຂົາຈະບໍ່ສາມາດເບິ່ງເຫັນພວກມັນອີກດ້ວຍ. ນີ້ຄືກົດບັນຍັດແຫ່ງການບໍລິຫານອັນສຸດທ້າຍຂອງເຮົາ.

# ບົດທີ 94

ເຮົາກັບຄືນສູ່ຊີໂອນພ້ອມກັບລູກຊາຍກົກຂອງເຮົາ, ພວກເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ແທ້ໆບໍ? ດັ່ງທີ່ເຮົາໄດ້ເຕືອນພວກເຈົ້າຄັ້ງແລ້ວຄັ້ງເລົ່າ, ເຮົາຕ້ອງການໃຫ້ພວກເຈົ້າເຕີບໃຫຍ່ຂຶ້ນໂດຍໄວ ແລະ ປົກຄອງຮ່ວມກັບເຮົາ. ພວກເຈົ້າຈື່ບໍ? ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ກ່ຽວຂ້ອງໂດຍກົງກັບການບັງເກີດເປັນມະນຸດຂອງເຮົາ: ຈາກຊີໂອນ, ເຮົາໄດ້ມາສູ່ໂລກໃນເນື້ອໜັງ ເພື່ອຮັບເອົາຄົນກຸ່ມໜຶ່ງທີ່ເປັນຈິດໜຶ່ງໃຈດຽວກັນກັບເຮົາຜ່ານເນື້ອໜັງ ແລະ ເມື່ອເປັນດັ່ງນັ້ນ, ເຮົາຈະກັບຄືນສູ່ຊີໂອນ. ນີ້ໝາຍຄວາມວ່າພວກເຮົາຍັງຈຳເປັນຕ້ອງກັບຄືນຈາກເນື້ອໜັງສູ່ຮ່າງກາຍເດີມ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງ "ການກັບຄືນສູ່ຊີໂອນ". ນີ້ຍັງແມ່ນຄວາມໝາຍທີ່ແທ້ຈິງ ແລະ ຈຸດສຳຄັນຂອງແຜນການຄຸ້ມຄອງທັງໝົດຂອງເຮົາ ແລະ ຍິ່ງໄປກວ່ານັ້ນ, ມັນແມ່ນພາກສ່ວນທີ່ສຳຄັນທີ່ສຸດຂອງແຜນການຄຸ້ມຄອງຂອງເຮົາ ເຊິ່ງບໍ່ມີໃຜສາມາດກີດຂວາງໄດ້ ແລະ ເຊິ່ງຈະບັນລຸໄດ້ທັນທີ. ເມື່ອຢູ່ໃນເນື້ອໜັງ, ຄົນໆໜຶ່ງບໍ່ສາມາດໂຍນຖິ້ມແນວຄິດ ແລະ ຄວາມຄິດຂອງມະນຸດໄດ້ ແລະ ແຮງໄກທີ່ຄົນໆນັ້ນຈະສາມາດໂຍນຖິ້ມອາກາດເທິງໂລກ ຫຼື ໂຍນຖິ້ມຂີ້ຝຸ່ນໄດ້ ແລະ ຄົນໆນັ້ນຈະເປັນດິນໜຽວຢູ່ສະເໝີ; ມີພຽງແຕ່ໃນຮ່າງກາຍເທົ່ານັ້ນ ຄົນໆໜຶ່ງຈຶ່ງສາມາດມີສິດຊື່ນຊົມພອນໄດ້. ພອນແມ່ນຫຍັງ? ພວກເຈົ້າຈື່ບໍ? ໃນເນື້ອໜັງ, ບໍ່ມີການຄຳນຶງເຖິງພອນໃດໆ, ດັ່ງນັ້ນ ເສັ້ນທາງຈາກເນື້ອໜັງສູ່ຮ່າງກາຍເປັນເສັ້ນທາງດຽວທີ່ລູກຊາຍກົກທຸກຄົນຕ້ອງປະຕິບັດຕາມ. ໃນເນື້ອໜັງ, ເຈົ້າຖືກກົດຂີ່ ແລະ ຖືກຂົ່ມເຫັງໂດຍມັງກອນແດງຜູ້ຍິ່ງໃຫຍ່ (ເຊິ່ງເປັນຍ້ອນເຈົ້າບໍ່ມີສິດອຳນາດ ແລະ ບໍ່ໄດ້ຮັບສະຫງ່າລາສີ), ແຕ່ໃນຮ່າງກາຍ ມັນຈະແຕກຕ່າງກັນຫຼາຍ ແລະ ເຈົ້າຈະພາກພູມໃຈ ແລະ ປິຕິຍິນດີຫຼາຍ. ມື້ແຫ່ງການກົດຂີ່ຈະສຳເລັດລົງທັງໝົດ ແລະ ເຈົ້າຈະໄດ້ຮັບການປົດປ່ອຍ ແລະ ເປັນອິດສະຫຼະຕະຫຼອດໄປ. ມີພຽງວິທີນີ້ເທົ່ານັ້ນ ເຮົາຈຶ່ງສາມາດຮ່ວມສິ່ງທີ່ເຮົາເປັນ ແລະ ສິ່ງທີເຮົາມີເຂົ້າໃນຕົວພວກເຈົ້າໄດ້. ບໍ່ດັ່ງນັ້ນ, ເຈົ້າກໍຈະມີພຽງແຕ່ຄຸນນະພາບຂອງເຮົາເທົ່ານັ້ນ. ບໍ່ວ່າຄົນໆໜຶ່ງຮຽນແບບຄົນອື່ນແນວໃດກໍຕາມໃນພາຍນອກ, ແທ້ຈິງແລ້ວ ພວກເຂົາກໍບໍ່ສາມາດເປັນຄືກັນໄດ້. ມີພຽງແຕ່ໃນຮ່າງກາຍຝ່າຍວິນຍານອັນບໍລິສຸດເທົ່ານັ້ນ (ໝາຍເຖິງຮ່າງກາຍ) ພວກເຮົາຈຶ່ງສາມາດເປັນຄືກັນໄດ້ແທ້ໆ (ເຊິ່ງໝາຍເຖິງການມີຄຸນນະພາບດຽວກັນ, ການເປັນຢູ່ດຽວກັນ, ການຄອບຄອງອັນດຽວກັນ ແລະ ການສາມາດເປັນຈິດໜຶ່ງໃຈດຽວກັນ, ສາມັກຄີ, ບໍ່ຖືກແບ່ງແຍກ ແລະ ບໍ່ຖືກແບ່ງເປັນສ່ວນໆ ເພາະວ່າທັງໝົດແມ່ນຮ່າງກາຍຝ່າຍວິນຍານອັນບໍລິສຸດ).

ເປັນຫຍັງຕອນນີ້ພວກເຈົ້າຈຶ່ງເລີ່ມກຽດຊັງໂລກ, ເປັນທີ່ລັງກຽດກັບການກິນ, ການນຸ່ງເຄື່ອງ ແລະ ທຸກຮູບແບບຂອງສິ່ງທີ່ໜ້າເບື່ອໜ່າຍເຊັ່ນນັ້ນ ແລະ ຍິ່ງໄປກວ່ານັ້ນແມ່ນບໍ່ສາມາດຖ້າທີ່ຈະກຳຈັດພວກມັນໄດ້? ນີ້ເປັນສັນຍານວ່າເຈົ້າຈະເຂົ້າສູ່ໂລກຝ່າຍວິນຍານ (ຮ່າງກາຍ). ພວກເຈົ້າທຸກຄົນສັງຫອນໃຈກ່ຽວກັບເລື່ອງນີ້ (ເຖິງແມ່ນວ່າພວກມັນແຕກຕ່າງກັນດ້ານລະດັບກໍຕາມ). ເຮົາຈະໃຊ້ປະໂຫຍດຈາກຄົນທີ່ແຕກຕ່າງກັນ, ເຫດການທີ່ແຕກຕ່າງກັນ ແລະ ສິ່ງຕ່າງໆ, ທັງໝົດເພື່ອຮັບໃຊ້

ບາດກ້າວທີ່ສຳຄັນທີ່ສຸດຂອງເຮົາ ແລະ ສິ່ງເຫຼົ່ານີ້ທັງໝົດຈະໃຫ້ບໍລິການແກ່ເຮົາ. ເຮົາຕ້ອງກະທຳເຊັ່ນນັ້ນ. (ແນ່ນອນ, ເຮົາບໍ່ສາມາດເຮັດສິ່ງນີ້ໃຫ້ສຳເລັດໃນເນື້ອໜັງໄດ້ ແລະ ມີພຽງພຣະວິນຍານເອງເທົ່ານັ້ນທີ່ສາມາດປະຕິບັດພາລະກິດນີ້ໄດ້, ຍ້ອນວ່າຍັງບໍ່ທັນຮອດເວລາເທື່ອ). ນີ້ແມ່ນໜ້າທີ່ໆນ້ອຍສຸດທ້າຍທີ່ໂລກຈັກກະວານທັງໝົດປະຕິບັດ. ທຸກຄົນຈະສັນລະເສີນເຮົາ ແລະ ໂຮ່ຮ້ອງຕ້ອນຮັບເຮົາຢ່າງປິຕິຍິນດີ. ພາລະກິດອັນຍິ່ງໃຫຍ່ຂອງເຮົາສຳເລັດແລ້ວ. ຂັນທັງເຈັດຂອງໂລກລະບາດໄດ້ຖອກເທອອກຈາກມືຂອງເຮົາແລ້ວ, ສຽງຟ້າຮ້ອງທັງເຈັດດັງກ້ອງວານ, ແກທັງເຈັດສົ່ງສຽງ ແລະ ຕາປະທັບທັງເຈັດໄດ້ຖືກເປີດອອກແກ່ໂລກຈັກກະວານ, ແກ່ທຸກຊົນຊາດ ແລະ ທຸກຄົນ ແລະ ແກ່ພູເຂົາ, ແມ່ນ້ຳ ແລະ ທຸກສິ່ງ. ຂັນທັງເຈັດຂອງໂລກລະບາດແມ່ນຫຍັງ? ແມ່ນຫຍັງຄືເປົ້າໝາຍທີ່ແນ່ນອນຂອງພວກມັນ? ເປັນຫຍັງເຮົາຈຶ່ງກ່າວວ່າພວກມັນຈະຖອກເທອອກຈາກມືຂອງເຮົາ? ເວລາຈະຜ່ານໄປອີກດົນກ່ອນທີ່ທຸກຄົນຈະເຊື່ອຢ່າງເຕັມປ່ຽມ, ກ່ອນທີ່ທຸກຄົນຈະເຂົ້າໃຈຢ່າງຖີ່ຖ້ວນ. ເຖິງແມ່ນວ່າເຮົາບອກພວກເຈົ້າໃນຕອນນີ້, ພວກເຈົ້າກໍຈະເຂົ້າໃຈພຽງພາກສ່ວນນ້ອຍໆເທົ່ານັ້ນ. ຕາມຈິນຕະນາການຂອງມະນຸດແລ້ວ, ຂັນທັງເຈັດຂອງໂລກລະບາດເລັງເປົ້າໄປທີ່ທຸກປະເທດ ແລະ ທຸກຄົນໃນໂລກ, ແຕ່ໃນຄວາມເປັນຈິງແລ້ວ ສິ່ງນີ້ບໍ່ເປັນຈິງ. “ຂັນທັງເຈັດຂອງໂລກລະບາດ” ໝາຍເຖິງອິດທິພົນຂອງຊາຕານມານຮ້າຍ ແລະ ໝາຍເຖິງການສົມຮູ້ຮ່ວມຄິດຂອງມັງກອນແດງຜູ້ຍິ່ງໃຫຍ່ (ເປົ້າໝາຍທີ່ເຮົາໃຊ້ເພື່ອໃຫ້ບໍລິການແກ່ເຮົາ). ໃນເວລານັ້ນ ເຮົາຈະປົດປ່ອຍຊາຕານ ແລະ ມັງກອນແດງຜູ້ຍິ່ງໃຫຍ່ໃຫ້ຂ້ຽນຕີລູກຊາຍ ແລະ ປະຊາຊົນ ແລະດ້ວຍວິທີນີ້ ມັນຈະເປີດເຜີຍໃຫ້ເຫັນວ່າໃຜເປັນລູກຊາຍ ແລະ ໃຜເປັນປະຊາຊົນ. ຄົນທີ່ຖືກຫຼອກລວງແມ່ນຜູ້ທີ່ບໍ່ແມ່ນເປົ້າໝາຍຂອງການກຳນົດໄວ້ລ່ວງໜ້າຂອງເຮົາ, ໃນຂະນະທີ່ລູກຊາຍກົກຂອງເຮົາໃນເວລານັ້ນຈະປົກຄອງຮ່ວມກັບເຮົາ. ດ້ວຍວິທີນີ້, ເຮົາຈະເຮັດໃຫ້ລູກຊາຍ ແລະ ປະຊາຊົນສົມບູນ. ການຖອກເທໂລກລະບາດທັງເຈັດຂັນອອກຈະບໍ່ເກີດຂຶ້ນກັບທຸກຊົນຊາດ ແລະ ທຸກຄົນ, ແຕ່ຈະເກີດກັບລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາເທົ່ານັ້ນ. ພອນບໍ່ໄດ້ມາງ່າຍໆ; ຕ້ອງໄດ້ຈ່າຍລາຄາເຕັມ. ເມື່ອລູກຊາຍ ແລະ ປະຊາຊົນເຕີບໃຫຍ່ຂຶ້ນ, ໂລກລະບາດທັງເຈັດຂັນຈະຖືກລຶບລ້າງໄປຢ່າງສິ້ນເຊີງ ແລະ ຫຼັງຈາກນັ້ນ ພວກມັນກໍຈະບໍ່ມີຢູ່ອີກ. “ສຽງຟ້າຮ້ອງທັງເຈັດດັງກ້ອງວານ” ແມ່ນຫຍັງ? ສິ່ງນີ້ບໍ່ໄດ້ເຂົ້າໃຈຍາກ. ໃນຊ່ວງເວລາທີ່ລູກຊາຍກົກຂອງເຮົາ ແລະ ເຮົາກາຍເປັນຮ່າງກາຍ, ສຽງຟ້າຮ້ອງທັງເຈັດຈະດັງກ້ອງວານ. ສິ່ງນີ້ຈະສັ່ນສະເທືອນຈັກກະວານທັງປວງຄືກັບວ່າສະຫວັນ ແລະ ແຜ່ນດິນໂລກຫງ່າຍທ້ອງຢູ່. ທຸກຄົນຈະຮູ້ເລື່ອງນີ້; ບໍ່ມີໃຜຈະບໍ່ຮູ້ກ່ຽວກັບມັນ. ໃນເວລານັ້ນ, ລູກຊາຍກົກຂອງເຮົາ ແລະ ເຮົາຈະຢູ່ໃນສະຫງ່າລາສີພ້ອມກັນ ແລະ ເລີ່ມບາດກ້າວໃໝ່ຂອງພາລະກິດ. ຫຼາຍຄົນຈະຄຸເຂົ່າລົງຮ້ອງຂໍຄວາມເມດຕາ ແລະ ຄວາມກະລຸນາຍ້ອນສຽງດັງກ້ອງວານຂອງສຽງຟ້າຮ້ອງທັງເຈັດ. ແຕ່ມັນຈະບໍ່ແມ່ນຍຸກແຫ່ງພຣະຄຸນອີກຕໍ່ໄປ: ມັນຈະເປັນເວລາແຫ່ງຄວາມໂກດຮ້າຍ. ສ່ວນທຸກຄົນທີ່ເຮັດຊົ່ວ (ຜູ້ທີ່ເຮັດຜິດປະເວນີ ຫຼື ຜູ້ທີ່ມີສ່ວນໃນເງິນສົກກະປົກ ຫຼື ມີຂອບເຂດທີ່ບໍ່ຊັດເຈນກັບເພດກົງກັນຂ້າມ ຫຼື ຜູ້ທີ່ຂັດຂວາງ ຫຼື ເຮັດໃຫ້ການຄຸ້ມຄອງຂອງເຮົາເສຍຫາຍ ຫຼື ຜູ້ທີ່ບໍ່ເຂົ້າໃຈເລື່ອງຝ່າຍວິນຍານ ຫຼື ຜູ້ທີ່ຖືກວິນຍານຊົ່ວຮ້າຍຄອບງຳ ແລະ ອື່ນໆອີກ,

ທຸກຄົນ ຍົກເວັ້ນຜູ້ທີ່ເຮົາເລືອກ), ບໍ່ມີໃຜຈະຖືກປ່ອຍໄປ ຫຼື ຖືກອະໄພໂທດ, ແຕ່ພວກເຂົາແຕ່ລະຄົນຈະຖືກໂຍນຖິ້ມລົງສູ່ດິນແດນມໍລະນາ ບ່ອນທີ່ພວກເຂົາຈະພິນາດໄປຕະຫຼອດການ! "ການສົ່ງສຽງຂອງແກທັງເຈັດ" ບໍ່ໄດ້ໝາຍເຖິງສະພາບແວດລ້ອມທີ່ຍິ່ງໃຫຍ່ ແລະ ໂຫດຮ້າຍ ຫຼື ມັນບໍ່ໄດ້ໝາຍເຖິງການປະກາດໃດໆຕໍ່ໂລກດ້ວຍ; ສິ່ງເຫຼົ່ານີ້ແມ່ນແນວຄິດຂອງມະນຸດທັງໝົດ. "ແກທັງເຈັດ" ໝາຍເຖິງພຣະຄຳທີ່ໂກດຮ້າຍຂອງເຮົາ. ເມື່ອສຽງຂອງເຮົາ (ການພິພາກສາອັນສະຫງ່າຜ່າເຜີຍ ແລະ ການພິພາກສາອັນໂກດຮ້າຍ) ເປົ່າອອກມາ, ແກທັງເຈັດກໍສົ່ງສຽງ. (ໃນສະພາບການຢູ່ໃນເຮືອນຂອງເຮົາຕອນນີ້, ນີ້ແມ່ນສິ່ງທີ່ຮ້າຍແຮງທີ່ສຸດ ແລະ ບໍ່ມີໃຜສາມາດຫຼົບໜີຈາກມັນໄດ້). ແລ້ວຜີຮ້າຍທັງໝົດໃນດິນແດນມໍລະນາ ແລະ ໃນນະຣົກ, ໃຫຍ່ ແລະ ນ້ອຍ ຈະເອົາມືຈັບຫົວຕົວເອງ ແລະ ໜີໄປທຸກທິດທາງພ້ອມທັງຮ້ອງໄຫ້ ແລະ ກັດແຂ້ວຂອງພວກມັນ, ອັບອາຍ ແລະ ບໍ່ມີບ່ອນໃຫ້ລີ້. ໃນຕອນນີ້, ມັນບໍ່ແມ່ນແກທັງເຈັດທີ່ກຳລັງເລີ່ມສົ່ງສຽງ, ແຕ່ແມ່ນຄວາມໂກດແຄ້ນທີ່ຮ້ອນຮົນຂອງເຮົາ ແລະ ການພິພາກສາທີ່ຮຸນແຮງທີ່ສຸດຂອງເຮົາ ເຊິ່ງບໍ່ມີໃຜສາມາດໜີພົ້ນ ແລະ ທຸກຄົນຕ້ອງໄດ້ຜ່ານ. ໃນເວລານີ້, ສິ່ງທີ່ໄດ້ຖືກເປີດເຜີຍບໍ່ແມ່ນເນື້ອໃນຂອງຕາປະທັບທັງເຈັດ. ຕາປະທັບທັງເຈັດແມ່ນພອນທີ່ພວກເຈົ້າຈະຊື່ນຊົມໃນອະນາຄົດ. "ການເປີດອອກ" ໝາຍເຖິງການແຈ້ງໃຫ້ພວກເຈົ້າຮູ້ກ່ຽວກັບພວກມັນເທົ່ານັ້ນ ແຕ່ພວກເຈົ້າຍັງບໍ່ທັນໄດ້ຊື່ນຊົມພອນເຫຼົ່ານີ້ເທື່ອ. ເມື່ອພວກເຈົ້າຊື່ນຊົມພອນເຫຼົ່ານີ້, ພວກເຈົ້າກໍຈະຮູ້ເນື້ອຫາຂອງຕາປະທັບທັງເຈັດ. ໃນຕອນນີ້ ເຈົ້າພຽງແຕ່ສຳຜັດສ່ວນໜຶ່ງທີ່ຍັງບໍ່ທັນສົມບູນເທື່ອ. ເຮົາສາມາດບອກໄດ້ພຽງແຕ່ລະຂັ້ນຕອນທີ່ມັນເກີດຂຶ້ນໃນລະຫວ່າງພາລະກິດໃນອະນາຄົດເທົ່ານັ້ນ, ດັ່ງນັ້ນ ພວກເຈົ້າຈະປະສົບກັບມັນເປັນການສ່ວນຕົວ ແລະ ຮູ້ສຶກໄດ້ເຖິງສະຫງ່າລາສີທີ່ບໍ່ສາມາດປຽບທຽບໄດ້ ແລະ ພວກເຈົ້າຈະຢູ່ໃນສະພາວະແຫ່ງຄວາມປິຕິຍິນດີທີ່ບໍ່ສິ້ນສຸດ.

ເພື່ອທີ່ຈະສາມາດຊື່ນຊົມພອນຂອງລູກຊາຍກົກນັ້ນບໍ່ແມ່ນສິ່ງທີ່ງ່າຍ ຫຼື ບໍ່ແມ່ນສິ່ງທີ່ຄົນທົ່ວໄປສາມາດບັນລຸໄດ້. ເຮົາຈະເນັ້ນຢ້ຳອີກຄັ້ງ ແລະ ກ່າວຢ່າງໜັກແໜ້ນຫຼາຍຂຶ້ນວ່າເຮົາຕ້ອງສ້າງຂໍ້ຮຽກຮ້ອງທີ່ເຂັ້ມງວດຕໍ່ລູກຊາຍກົກຂອງເຮົາ. ບໍ່ດັ່ງນັ້ນ, ພວກເຂົາກໍຈະບໍ່ສາມາດເຊີດຊູນາມຂອງເຮົາໄດ້. ເຮົາປະຕິເສດຢ່າງເດັດຂາດຕໍ່ໃຜກໍຕາມທີ່ມີຊື່ສຽງບໍ່ດີໃນໂລກ ແລະ ຍິ່ງໄປກວ່ານັ້ນ ເຮົາປະຕິເສດໃຜກໍຕາມທີ່ສຳສ່ອນ. (ພວກເຂົາບໍ່ມີສ່ວນໃນການກາຍເປັນຄົນຂອງພຣະເຈົ້າ, ເຮົາໃຫ້ຄວາມສຳຄັນເປັນພິເສດໃນເລື່ອງນີ້). ຢ່າຄິດວ່າສິ່ງທີ່ເຈົ້າເຮັດໃນອະດີດໝົດໄປ ແລະ ຈົບລົງແລ້ວ, ເຮັດແນວໃດຈຶ່ງຈະມີສິ່ງທີ່ດີແບບນີ້! ມັນງ່າຍຫຼາຍບໍທີ່ຈະໄດ້ຮັບສະຖານະຂອງລູກຊາຍກົກ? ໃນທຳນອງດຽວກັນເຮົາປະຕິເສດໃຜກໍຕາມທີ່ຕໍ່ຕ້ານເຮົາ, ໃຜກໍຕາມທີ່ບໍ່ຮັບຮູ້ເຮົາໃນເນື້ອໜັງຂອງເຮົາ, ໃຜກໍຕາມທີ່ແຊກແຊງເຮົາໃນຂະນະທີ່ເຮົາປະຕິບັດຕາມຄວາມປະສົງຂອງເຮົາ ແລະ ໃຜກໍຕາມຂົ່ມເຫັງເຮົາ, ສິ່ງນີ້ບອກວ່າເຮົາໂຫດຮ້າຍສໍ່າໃດ (ຍ້ອນວ່າເຮົາໄດ້ຍຶດອຳນາດຂອງເຮົາຄືນຢ່າງສິ້ນເຊີງ)! ໃນທີ່ສຸດ, ເຮົາກໍປະຕິເສດໃຜກໍຕາມທີ່ບໍ່ເຄີຍມີຄວາມລົ້ມເຫຼວໃດໆໃນຊີວິດໃນທຳນອງດຽວກັນ. ເຮົາຕ້ອງການຜູ້ທີ່ພົ້ນຈາກຄວາມເດືອດຮ້ອນຂອງພວກເຂົາຄືກັນກັບເຮົາ, ເຖິງແມ່ນວ່າພວກມັນແມ່ນຄວາມເດືອດຮ້ອນເລັກນ້ອຍກໍຕາມ. ຖ້າວ່າພວກເຂົາບໍ່ໄດ້ພົ້ນ, ພວກເຂົາກໍເປັນຄົນປະເພດທີ່ເຮົາຈະເຕະອອກເສຍ.

ຢ່າງເປັນຄົນໄຮ້ຢາງອາຍທີ່ຕ້ອງການເປັນລູກຊາຍກົກຂອງເຮົາ, ແທ່ຕົວເອງຕໍ່ໜ້າເຮົາ. ຈົ່ງໜີໄກຈາກເຮົາໄວໆ! ກ່ອນໜ້ານີ້ ເຈົ້າໄດ້ບອກເຮົາເຖິງເລື່ອງເລັກໆນ້ອຍໆ, ສະແຫວງຫາທີ່ຈະໄດ້ຄວາມສຸກຂອງເຮົາ! ນີ້ແມ່ນຄວາມຕາບອດ! ເຈົ້າບໍ່ຮູ້ບໍວ່າເຮົາກຽດຊັງເຈົ້າ, ເຈົ້າຄົນໜ້າເວດທະນາທີ່ໄຮ້ຄ່າເອີຍ? ເຈົ້າຄິດວ່າເຮົາບໍ່ຮູ້ຈັກການຈັດການແບບລັບໆຂອງເຈົ້າບໍ? ເຈົ້າປິດບັງຄັ້ງແລ້ວຄັ້ງເລົ່າ! ເຈົ້າບໍ່ຮູ້ບໍວ່າເຈົ້າໄດ້ສະແດງໃບໜ້າຂອງຜີຮ້າຍຂອງເຈົ້າອອກມາ? ເຖິງແມ່ນວ່າຄົນບໍ່ສາມາດເຫັນມັນໄດ້, ເຈົ້າຄິດວ່າເຮົາບໍ່ສາມາດເຫັນມັນໄດ້ບໍ? ບັນດາຜູ້ທີ່ໃຫ້ບໍລິການແກ່ເຮົາເປັນຄົນບໍ່ດີ; ພວກເຂົາແມ່ນກຸ່ມຄົນຊົ່ວຮ້າຍທີ່ໄຮ້ຄ່າ. ເຮົາຕ້ອງຈັດການພວກເຂົາ. ເຮົາຈະໂຍນພວກເຂົາລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ ແລະ ເຜົາພວກເຂົາເສຍ!

ເຈົ້າເວົ້າໃນລັກສະນະທີ່ບໍ່ເຫຼື້ອມໃສ, ກະທຳຢ່າງບໍ່ຊື່ສັດ ແລະ ບໍ່ຮ່ວມມືກັບຄົນອື່ນຢ່າງເໝາະສົມ; ຄົນເຊັ່ນນີ້ຍັງປາຖະໜາທີ່ຈະເປັນກະສັດ, ບໍ່ແມ່ນເຈົ້າກຳລັງຝັນຢູ່ບໍ? ບໍ່ແມ່ນເຈົ້າປະສາດຫຼອນບໍ? ເຈົ້າບໍ່ເຫັນສິ່ງທີ່ເຈົ້າເປັນບໍ? ເຈົ້າຊ່າງເປັນຄົນໜ້າເວດທະນາທີ່ໄຮ້ຄ່າແທ້! ມີປະໂຫຍດຈາກຄົນເຊັ່ນນີ້ບໍ? ຈົ່ງຟ້າວໜີໄປຈາກສາຍຕາເຮົາ! ທຸກຄົນຄວນເຂົ້າໃຈສິ່ງທີ່ເຮົາກ່າວຢ່າງຊັດເຈນ, ໄດ້ຮັບການດົນໃຈໂດຍພຣະທຳຂອງເຮົາ, ຮັບຮູ້ອຳນາດອັນໄພສານຂອງເຮົາ ແລະ ຮູ້ຈັກສະຕິປັນຍາຂອງເຮົາ. ມັນຖືກກ່າວເລື້ອຍໆວ່າຮ່າງກາຍຝ່າຍວິນຍານອັນບໍລິສຸດໄດ້ປາກົດມາແລ້ວ. ໃນທີ່ສຸດ, ພວກເຈົ້າຈະເວົ້າບໍວ່າຮ່າງກາຍຝ່າຍວິນຍານອັນບໍລິສຸດໄດ້ປາກົດຂຶ້ນແລ້ວ ຫຼື ຍັງ? ສິ່ງທີ່ເຮົາກ່າວເປັນການເວົ້າທີ່ວ່າງເປົ່າບໍ? ຮ່າງກາຍຝ່າຍວິນຍານອັນບໍລິສຸດແມ່ນຫຍັງ? ຮ່າງກາຍຝ່າຍວິນຍານອັນບໍລິສຸດດຳລົງຢູ່ໃນສະຖານະການໃດ? ສຳລັບມະນຸດ, ມັນບໍ່ສາມາດຈິນຕະນາການໄດ້ ແລະ ບໍ່ສາມາດເຂົ້າໃຈໄດ້. ເຮົາບອກພວກເຈົ້າວ່າ: ເຮົາບໍ່ມີຕຳນິ ແລະ ໃນເຮົາທຸກຢ່າງແມ່ນເປີດເຜີຍ ແລະ ທຸກສິ່ງຖືກປົດປ່ອຍ (ຍ້ອນວ່າເຮົາກະທຳຢ່າງມີສະຕິປັນຍາ ແລະ ເຮົາກ່າວຢ່າງເປັນອິດສະຫຼະ). ໃນບັນດາການກະທຳຂອງເຮົາ, ບໍ່ມີອັນໃດທີ່ໜ້າອັບອາຍ ແລະ ທັງໝົດໄດ້ຖືກເຮັດສຳເລັດຢ່າງເປີດເຜີຍ ເພື່ອໃຫ້ທຸກຄົນສາມາດໝັ້ນໃຈໄດ້ຢ່າງເຕັມທີ່. ຍິ່ງໄປກວ່ານັ້ນ, ບໍ່ມີມະນຸດຄົນໃດສາມາດຍຶດເອົາສິ່ງໃດກໍຕາມທີ່ຢູ່ໃນຕົວພວກເຂົາເພື່ອໃຊ້ພວກມັນຕໍ່ຕ້ານເຮົາ. ນັ້ນແມ່ນຄຳອະທິບາຍຂອງຄຳວ່າ "ບໍລິສຸດ" ໃນ "ຮ່າງກາຍຝ່າຍວິນຍານອັນບໍລິສຸດ". ສະນັ້ນ, ເຮົາໄດ້ເນັ້ນຢໍ້າຊໍ້າແລ້ວຊໍ້າອີກວ່າ ເຮົາບໍ່ຕ້ອງການຜູ້ໃດທີ່ເຮັດສິ່ງທີ່ໜ້າອັບອາຍ. ນີ້ແມ່ນຂໍ້ໜຶ່ງຂອງບົດບັນຍັດການບໍລິຫານຂອງເຮົາ ແລະ ມັນຍັງແມ່ນສ່ວນໜຶ່ງຂອງອຸປະນິໄສຂອງເຮົາດ້ວຍ. "ຮ່າງກາຍຝ່າຍວິນຍານ" ໝາຍເຖິງພຣະຄຳຂອງເຮົາ. ສິ່ງທີ່ເຮົາກ່າວມີຈຸດປະສົງຢູ່ສະເໝີ, ມີສະຕິປັນຍາຢູ່ສະເໝີ, ແຕ່ບໍ່ຢູ່ພາຍໃຕ້ການຄວບຄຸມ. (ເຮົາກ່າວສິ່ງທີ່ເຮົາຕ້ອງການກ່າວ ແລະ ແມ່ນພຣະວິນຍານຂອງເຮົາທີ່ເປັ່ງສຽງຂອງພຣະອົງອອກມາ ແລະ ແມ່ນຕົວຕົນຂອງເຮົາທີ່ກຳລັງກ່າວ). ສິ່ງທີ່ເຮົາກ່າວຖືກປົດປ່ອຍຢ່າງເປັນອິດສະຫຼະ ແລະ ເມື່ອບໍ່ເປັນໄປຕາມແນວຄິດຂອງຜູ້ຄົນ, ນັ້ນກໍແມ່ນເວລາທີ່ຈະເປີດເຜີຍຜູ້ຄົນ. ນີ້ແມ່ນການຈັດແຈງທີ່ເໝາະສົມຂອງເຮົາ. ເພາະສະນັ້ນ, ເມື່ອໃດກໍຕາມທີ່ຕົວຕົນຂອງເຮົາກ່າວ ຫຼື ກະທຳ, ມັນເປັນໂອກາດທີ່ດີສະເໝີທີ່ຈະເປີດໂປງທາດແທ້ຂອງຊາຕານ. ເມື່ອຕົວຕົນທີ່ເຮົາເປັນໄດ້ຖືກເຈີມນໍ້າມັນ, ຮ່າງກາຍຝ່າຍວິນຍານອັນ

ບໍລິສຸດກໍປາກົດອອກມາ. ໃນອະນາຄົດ, "ຮ່າງກາຍຝ່າຍວິນຍານອັນບໍລິສຸດ" ຈະໝາຍເຖິງຮ່າງກາຍ ແລະ ມີສອງແງ່ມຸມໃນຄວາມໝາຍນີ້. ມີແງ່ມຸມໜຶ່ງຂອງຄວາມໝາຍໃນປັດຈຸບັນ ແລະ ອີກແງ່ມຸມໜຶ່ງຂອງຄວາມໝາຍໃນອະນາຄົດ. ແຕ່ໃນອະນາຄົດ, ຮ່າງກາຍຝ່າຍວິນຍານອັນບໍລິສຸດຈະແຕກຕ່າງກັນຫຼາຍກັບປັດຈຸບັນ, ຄວາມແຕກຕ່າງຈະເປັນຄືກັບລະຫວ່າງສະຫວັນ ແລະ ແຜ່ນດິນໂລກ. ບໍ່ມີໃຜສາມາດຢັ່ງຮູ້ມັນໄດ້ ແລະ ເຮົາຈະຕ້ອງເປີດເຜີຍມັນໃຫ້ແກ່ພວກເຈົ້າເປັນການສ່ວນຕົວ.

# ບົດທີ 95

ຜູ້ຄົນຈິນຕະນາການວ່າທຸກສິ່ງງ່າຍດາຍຢ່າງທີ່ສຸດ, ເມື່ອໃນຄວາມເປັນຈິງແລ້ວ ສິ່ງນີ້ບໍ່ແມ່ນຄວາມຈິງ. ມີຄວາມລຶກລັບທີ່ລີ້ລັບຢູ່ພາຍໃນທຸກສິ່ງ ພ້ອມທັງສະຕິປັນຍາຂອງເຮົາ ແລະ ການຈັດແຈງຂອງເຮົາ. ບໍ່ມີລາຍລະອຽດໃດທີ່ຈະຖືກເບິ່ງຂ້າມ ແລະ ທຸກສິ່ງຖືກຈັດແຈງໂດຍເຮົາເອງ. ການພິພາກສາຂອງມື້ທີ່ຍິ່ງໃຫຍ່ເກີດຂຶ້ນຕໍ່ທຸກຄົນທີ່ບໍ່ຮັກເຮົາຢ່າງຈິງໃຈ (ໃຫ້ຈື່ໄວ້ວ່າ ການພິພາກສາຂອງມື້ທີ່ຍິ່ງໃຫຍ່ແມ່ນແນໃສ່ທຸກຄົນທີ່ໄດ້ຮັບນາມນີ້) ແລະ ເຮັດໃຫ້ພວກເຂົາຮ້ອງໄຫ້ ແລະ ກັດແຂ້ວຂອງພວກເຂົາ. ສຽງຮ້ອງໄຫ້ຄໍ່າຄວນມາຈາກດິນແດນມໍລະນາ ແລະ ມາຈາກນະຮົກ; ມັນບໍ່ແມ່ນຜູ້ຄົນທີ່ຮ້ອງໄຫ້, ແຕ່ເປັນມານຮ້າຍ. ມັນຄືການພິພາກສາຂອງເຮົາທີ່ນໍາການຮ້ອງໄຫ້ນີ້ມາ, ທີ່ນໍາຄວາມລອດພົ້ນສຸດທ້າຍຂອງແຜນການຄຸ້ມຄອງຂອງເຮົາມາໃຫ້ແກ່ຜູ້ຄົນ. ເຮົາເຄີຍຕັ້ງຄວາມຫວັງບາງຢ່າງໄວ້ກັບບາງຄົນ. ແຕ່ເມື່ອຫຼຽວເບິ່ງໃນຕອນນີ້, ເຮົາຕ້ອງປະຖິ້ມຄົນເຫຼົ່ານີ້ເທື່ອລະຄົນ, ຍ້ອນນີ້ແມ່ນຂັ້ນຕອນທີ່ພາລະກິດຂອງເຮົາໄດ້ໄປເຖິງ ແລະ ນີ້ແມ່ນສິ່ງທີ່ບໍ່ມີຜູ້ໃດສາມາດປ່ຽນແປງໄດ້. ທຸກຄົນທີ່ບໍ່ແມ່ນລູກຊາຍກົກຂອງເຮົາ ຫຼື ປະຊາຊົນຂອງເຮົາຕ້ອງຖືກປະຖິ້ມ ແລະ ຕ້ອງໜີໄປຈາກເຮົາ! ເຈົ້າຕ້ອງເຂົ້າໃຈວ່າໃນປະເທດຈີນ ນອກຈາກລູກຊາຍກົກຂອງເຮົາ ແລະ ປະຊາຊົນຂອງເຮົາ, ທຸກຄົນທີ່ເຫຼືອເປັນລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ຕ້ອງຖືກປະຖິ້ມ. ພວກເຈົ້າທຸກຄົນຕ້ອງເຂົ້າໃຈ, ໃນທີ່ສຸດແລ້ວປະເທດຈີນກໍເປັນຊົນຊາດທີ່ຖືກເຮົາສາບແຊ່ງ ແລະ ປະຊາຊົນຂອງເຮົາສອງສາມຄົນກໍເປັນພຽງຄົນທີ່ໃຫ້ບໍລິການແກ່ພາລະກິດຂອງເຮົາໃນອະນາຄົດ. ເວົ້າອີກຢ່າງໜຶ່ງກໍຄື ນອກຈາກລູກຊາຍກົກຂອງເຮົາບໍ່ແມ່ນຜູ້ໃດອີກ ນັ້ນກໍຄື ພວກເຂົາທຸກຄົນຕ້ອງຈິບຫາຍ. ຢ່າຄິດວ່າ ເຮົາຮຸນແຮງເກີນໄປໃນການກະທໍາຂອງເຮົາ ນັ້ນກໍຄື ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ. ຄົນທີ່ທົນທຸກກັບຄໍາສາບແຊ່ງຂອງເຮົາແມ່ນເປົ້າໝາຍຂອງຄວາມກຽດຊັງຂອງເຮົາ ແລະ ສິ່ງນີ້ຖືກກໍານົດໄວ້ໃນກ້ອນຫີນ. ເຮົາບໍ່ໄດ້ເຮັດຜິດ; ຖ້າເຮົາເຫັນຜູ້ໃດຜູ້ໜຶ່ງທີ່ບໍ່ເຮັດໃຫ້ເຮົາພໍໃຈ, ເຮົາຈະເຕະພວກເຂົາອອກ; ສິ່ງນັ້ນແມ່ນເຄື່ອງພິສູດຢ່າງພຽງພໍວ່າ ເຈົ້າຖືກເຮົາສາບແຊ່ງ ແລະ ເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່. ໃຫ້ເຮົາອະທິບາຍແກ່ເຈົ້າອີກຄັ້ງ ນັ້ນກໍຄື ມີພຽງລູກຊາຍກົກຂອງເຮົາເທົ່ານັ້ນທີ່ຢູ່ໃນປະເທດຈີນ (ນອກຈາກປະຊາຊົນຂອງເຮົາທີ່ໃຫ້ບໍລິການ) ແລະ ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ. ແຕ່ລູກຊາຍກົກຂອງເຮົາມີຢູ່ຈໍານວນໜ້ອຍ ແລະ ທຸກຄົນຖືກເຮົາກໍານົດໄວ້ລ່ວງໜ້າ ນັ້ນກໍຄື ເຮົາຮູ້ວ່າເຮົາກໍາລັງເຮັດຫຍັງ. ເຮົາບໍ່ຢ້ານຄວາມຄິດລົບຂອງເຈົ້າ ແລະ ເຮົາບໍ່ຢ້ານວ່າ ເຈົ້າຈະຫັນຫຼັງກັບ ແລະ ກັດເຮົາ ຍ້ອນເຮົາມີບົດບັນຍັດການປົກຄອງຂອງເຮົາ ແລະ ເຮົາມີຄວາມໂກດຮ້າຍ. ນັ້ນໝາຍຄວາມວ່າ ເຮົາມີໄພພິບັດອັນຍິ່ງໃຫຍ່ໃນມືຂອງເຮົາ ແລະ ເຮົາບໍ່ຢ້ານຫຍັງ ຍ້ອນເຮົາຖືວ່າທຸກສິ່ງໄດ້ຖືກບັນລຸແລ້ວ ແລະ ເມື່ອມື້ນັ້ນມາເຖິງ ເຮົາຈະຈັດການກັບເຈົ້າຢ່າງສົມບູນ. ຄົນໃດໜຶ່ງບໍ່ສາມາດຖືກມະນຸດເຮັດໃຫ້ສົມບູນ ຫຼື ຖືກແກ້ໄຂໃຫ້ກາຍເປັນລູກຊາຍກົກຂອງເຮົາໄດ້ ນັ້ນກໍຄື ເລື່ອງນີ້ແມ່ນຂຶ້ນຢູ່ກັບການກໍານົດລ່ວງໜ້າຂອງເຮົາທັງສິ້ນ. ຜູ້ໃດກໍຕາມທີ່ເຮົາເວົ້າວ່າເປັນລູກຊາຍກົກກໍເປັນລູກຊາຍກົກ; ຢ່າພະຍາຍາມຍາດຊິງ ຫຼື

ຍຶດຄອງມັນ. ທຸກສິ່ງແມ່ນຂຶ້ນຢູ່ກັບເຮົາ ພຣະເຈົ້າອົງຊົງລິດທານຸພາບສູງສຸດເອງ.

ມື້ໜຶ່ງ ເຮົາຈະເຮັດໃຫ້ພວກເຈົ້າທຸກຄົນໄດ້ເຫັນວ່າ ບົດບັນຍັດການປົກຄອງຂອງເຮົາແມ່ນຫຍັງ ແລະ ຄວາມໂກດຮ້າຍຂອງເຮົາແມ່ນຫຍັງ (ທຸກຄົນຈະຄຸເຂົ່າລົງຕໍ່ເຮົາ, ທຸກຄົນຈະນະມັດສະການເຮົາ, ທຸກຄົນຈະຂໍການອະໄພໂທດຈາກເຮົາ ແລະ ທຸກຄົນຈະເຊື່ອຟັງ; ປັດຈຸບັນນີ້ ເຮົາອະນຸຍາດໃຫ້ລູກຊາຍກົກຂອງເຮົາເຫັນມັນພຽງແຕ່ບາງສ່ວນເທົ່ານັ້ນ). ເຮົາຈະເຮັດໃຫ້ລູກຫຼານທຸກຄົນຂອງມັງກອນແດງຜູ້ຍິ່ງໃຫຍ່ໄດ້ເຫັນວ່າ ເຮົາຄັດເລືອກຫຼາຍຄົນໃຫ້ເສຍສະຫຼະ (ທຸກຄົນຍົກເວັ້ນລູກຊາຍກົກຂອງເຮົາ) ເພື່ອເຮັດໃຫ້ລູກຊາຍກົກຂອງເຮົາສົມບູນ, ເຮົາໄດ້ເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ຕົກເປັນເຫຍື່ອກົນອຸບາຍທີ່ມີເລ່ລ່ຽມຂອງມັນເອງ. (ໃນແຜນການຄຸ້ມຄອງຂອງເຮົາ, ມັງກອນແດງຜູ້ຍິ່ງໃຫຍ່ສິ່ງຄົນທີ່ໃຫ້ບໍລິການແກ່ເຮົາ ນັ້ນກໍຄື ທຸກຄົນ ຍົກເວັ້ນລູກຊາຍກົກຂອງເຮົາ ໃຫ້ກໍ່ກວນແຜນການຄຸ້ມຄອງຂອງເຮົາ; ແຕ່ມັນກໍຕົກເປັນເຫຍື່ອກົນອຸບາຍທີ່ມີເລ່ລ່ຽມຂອງມັນເອງ ແລະ ພວກເຂົາທຸກຄົນກໍໃຫ້ບໍລິການແກ່ພາລະກິດຂອງເຮົາ. ນີ້ແມ່ນສ່ວນໜຶ່ງຂອງຄວາມໝາຍທີ່ແທ້ຈິງຂອງການທີ່ເຮົາລະດົມທຸກຄົນເພື່ອໃຫ້ບໍລິການແກ່ເຮົາ). ມື້ນີ້ ເມື່ອທຸກສິ່ງໄດ້ຖືກບັນລຸ, ເຮົາຈະໂຍນພວກເຂົາທຸກຄົນຖິ້ມ, ຢຽບພວກເຂົາຢູ່ໃຕ້ຕີນຂອງເຮົາ ແລະ ຜ່ານສິ່ງນີ້ ເຮົາຈະເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ຂາຍໜ້າ ແລະ ເຮັດໃຫ້ມັນອັບອາຍຢ່າງທີ່ສຸດ (ພວກເຂົາພະຍາຍາມຫຼອກລວງເພື່ອຮັບເອົາພອນ, ແຕ່ພວກເຂົາບໍ່ເຄີຍຄິດວ່າ ພວກເຂົາຈະໃຫ້ບໍລິການແກ່ເຮົາ), ນີ້ແມ່ນສະຕິປັນຍາຂອງເຮົາ. ເມື່ອໄດ້ຍິນສິ່ງນີ້ ຜູ້ຄົນກໍຄິດວ່າເຮົາບໍ່ມີຄວາມຮູ້ສຶກ ຫຼື ຄວາມເມດຕາ ແລະ ເຮົາບໍ່ມີຄວາມເປັນມະນຸດ. ແນ່ນອນ ເຮົາບໍ່ມີຄວາມຮູ້ສຶກ ຫຼື ຄວາມເມດຕາຕໍ່ຊາຕານ ແລະ ຍິ່ງໄປກວ່ານັ້ນ ເຮົາເປັນພຣະເຈົ້າເອງ ຜູ້ທີ່ຢູ່ເໜືອຄວາມເປັນມະນຸດ. ເຈົ້າສາມາດເວົ້າໄດ້ແນວໃດວ່າເຮົາເປັນພຣະເຈົ້າທີ່ມີຄວາມເປັນມະນຸດ? ເຈົ້າບໍ່ຮູ້ບໍວ່າເຮົາບໍ່ໄດ້ມາຈາກໂລກ? ເຈົ້າບໍ່ຮູ້ບໍວ່າ ເຮົາຢູ່ເໜືອທຸກສິ່ງ? ນອກຈາກລູກຊາຍກົກຂອງເຮົາ ບໍ່ມີຜູ້ໃດຄືເຮົາ, ບໍ່ມີຜູ້ໃດມີອຸປະນິໄສຂອງເຮົາ (ອຸປະນິໄສທີ່ບໍ່ແມ່ນຂອງມະນຸດ, ແຕ່ເປັນຂອງພຣະເຈົ້າ) ແລະ ບໍ່ມີຜູ້ໃດມີຄຸນລັກສະນະຂອງເຮົາ.

ເມື່ອປະຕູສູ່ໂລກຝ່າຍວິນຍານຖືກເປີດອອກ, ພວກເຈົ້າຈະໄດ້ເຫັນຄວາມລຶກລັບທັງໝົດ ທີ່ເຮັດໃຫ້ພວກເຈົ້າສາມາດເຂົ້າສູ່ອານາຈັກອິດສະຫຼະ, ເຂົ້າສູ່ອ້ອມກອດອັນເປັນທີ່ຮັກຂອງເຮົາ ແລະ ເຂົ້າສູ່ພອນຊົ່ວນິດນິລັນຂອງເຮົາ. ມືຂອງເຮົາຄໍ້າຊູມະນຸດຊາດຢູ່ສະເໝີ. ແຕ່ມີມະນຸດຊາດສ່ວນໜຶ່ງທີ່ເຮົາຈະຊ່ວຍໃຫ້ລອດພົ້ນ ແລະ ສ່ວນໜຶ່ງທີ່ເຮົາຈະບໍ່ຊ່ວຍໃຫ້ລອດພົ້ນ. (ເຮົາເວົ້າວ່າ "ຄໍ້າຊູ" ເພາະຫາກປາສະຈາກການຄໍ້າຊູຂອງເຮົາ ໂລກທັງປວງກໍຈະຕົກລົງສູ່ດິນແດນມໍລະນາແຕ່ດົນແລ້ວ). ໃຫ້ເຂົ້າໃຈສິ່ງນີ້ໄວ້! ນີ້ແມ່ນແຜນການຄຸ້ມຄອງຂອງເຮົາ. ແລ້ວແຜນການຄຸ້ມຄອງຂອງເຮົາແມ່ນຫຍັງ? ເຮົາສ້າງມະນຸດຊາດ, ແຕ່ເຮົາບໍ່ເຄີຍວາງແຜນທີ່ຈະຮັບທຸກໆຄົນ, ພຽງແຕ່ຮັບເອົາມະນຸດຊາດສ່ວນເລັກນ້ອຍ. ແລ້ວເປັນຫຍັງເຮົາຈຶ່ງສ້າງຫຼາຍຄົນແບບນັ້ນ? ເຮົາໄດ້ເວົ້າກ່ອນນັ້ນແລ້ວວ່າ ເມື່ອມີເຮົາ ທຸກສິ່ງແມ່ນອິດສະຫຼະພາບ ແລະ ການປົດປ່ອຍ ແລະ ເຮົາເຮັດຫຍັງກໍຕາມທີ່ເຮົາປາຖະໜາ. ເມື່ອເຮົາສ້າງມະນຸດຊາດ, ມັນກໍເປັນແບບນັ້ນ ເພື່ອວ່າພວກເຂົາຈະສາມາດມີຊີວິດຕາມປົກກະຕິ ແລະ ຫຼັງຈາກນັ້ນ

ກໍເກີດມີມະນຸດຊາດສ່ວນເລັກນ້ອຍທີ່ຈະເປັນລູກຊາຍກົກຂອງເຮົາ, ລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາ. ມັນສາມາດເວົ້າໄດ້ວ່າ ທຸກຄົນ, ທຸກເຫດການ ແລະ ທຸກສິ່ງ ນັ້ນກໍຄື ນອກຈາກລູກຊາຍກົກຂອງເຮົາ, ປະຊາຊົນຂອງເຮົາ ແລະ ລູກຊາຍຂອງເຮົາ ທຸກຄົນເປັນຜູ້ໃຫ້ບໍລິການ ແລະ ຕ້ອງພິນາດໄປທັງໝົດ. ໃນລັກສະນະນີ້ ແຜນການຄຸ້ມຄອງທັງໝົດຂອງເຮົາຈະສິ້ນສຸດລົງ. ນີ້ແມ່ນແຜນການຄຸ້ມຄອງຂອງເຮົາ, ມັນຄືພາລະກິດຂອງເຮົາ ແລະ ມັນຄືບາດກ້າວທີ່ເຮົາປະຕິບັດ. ເມື່ອທຸກສິ່ງສິ້ນສຸດໄປ ເຮົາກໍຈະໄດ້ພັກຜ່ອນຢ່າງສົມບູນ. ໃນເວລານັ້ນ ທຸກສິ່ງຈະປົກກະຕິດີ; ທຸກສິ່ງຈະສະຫງົບສຸກ ແລະ ໝັ້ນຄົງ.

ໄລຍະກ້າວຂອງພາລະກິດຂອງເຮົາວ່ອງໄວຫຼາຍຈົນມັນຢູ່ເໜືອຈິນຕະນາການຂອງມະນຸດ. ມັນປ່ຽນແປງໃນແຕ່ລະມື້ ແລະ ຜູ້ໃດກໍຕາມທີ່ບໍ່ສາມາດຕາມທັນກໍຈະທົນທຸກກັບການສູນເສຍ; ຄົນໃດໜຶ່ງພຽງແຕ່ສາມາດຍຶດໝັ້ນກັບແສງສະຫວ່າງໃໝ່ໃນແຕ່ລະມື້ (ເຖິງແມ່ນວ່າບໍ່ເຄີຍມີການປ່ຽນແປງໃນບົດບັນຍັດການປົກຄອງຂອງເຮົາ ພ້ອມທັງນິມິດ ແລະ ຄວາມຈິງທີ່ເຮົາສົນທະນາເຖິງ). ເປັນຫຍັງເຮົາຈຶ່ງເວົ້າໃນແຕ່ລະມື້? ເປັນຫຍັງເຮົາຈຶ່ງສ່ອງແສງສະຫວ່າງໃຫ້ແກ່ເຈົ້າຢ່າງສະໝໍ່າສະເໝີ? ເຈົ້າເຂົ້າໃຈຄວາມໝາຍແທ້ຈິງທີ່ຢູ່ພາຍໃນບໍ? ໃນຕອນນີ້ ຄົນສ່ວນໃຫຍ່ຍັງກຳລັງຫົວຂວັນ ແລະ ເວົ້າຫຼິ້ນ ແລະ ບໍ່ສາມາດຈິງຈັງໄດ້. ພວກເຂົາບໍ່ໄດ້ເອົາໃຈໃສ່ຫຍັງເລີຍຕໍ່ພຣະທຳຂອງເຮົາ, ພຽງແຕ່ຮູ້ສຶກເຖິງຄວາມວິຕົກທີ່ຖ່າຍທອດອອກມາ ເມື່ອພວກເຂົາໄດ້ຍິນພຣະທຳເຫຼົ່ານັ້ນ. ຫຼັງຈາກນັ້ນ ອີກບໍ່ດົນພຣະທຳຂອງເຮົາກໍຖືກລືມ ແລະ ອີກບໍ່ດົນ ພວກເຂົາກໍບໍ່ຮູ້ຈັກຕົວຕົນຂອງພວກເຂົາເອງ ແລະ ພວກເຂົາກໍບໍ່ໃສ່ໃຈ. ເຈົ້າຮູ້ບໍວ່າສະຖານະຂອງເຈົ້າແມ່ນຫຍັງ? ບໍ່ວ່າຜູ້ໃດຜູ້ໜຶ່ງໃຫ້ບໍລິການແກ່ເຮົາ ຫຼື ຖືກກຳນົດໄວ້ລ່ວງໜ້າ ແລະ ຖືກເຮົາເລືອກໄວ້ ຫຼື ບໍ່ນັ້ນແມ່ນຖືກຈັດການໂດຍມືຂອງເຮົາເທົ່ານັ້ນ; ບໍ່ມີຜູ້ໃດສາມາດປ່ຽນແປງສິ່ງນີ້ໄດ້ ນັ້ນກໍຄື ເຮົາຕ້ອງເຮັດສິ່ງນີ້ດ້ວຍຕົນເອງ, ເຮົາຕ້ອງເລືອກ ແລະ ກຳນົດພວກເຂົາລ່ວງໜ້າໄວ້ດ້ວຍຕົນເອງ. ຜູ້ໃດກ້າເວົ້າວ່າ ເຮົາເປັນພຣະເຈົ້າທີ່ບໍ່ມີສະຕິປັນຍາ? ພຣະທຳທຸກຂໍ້ທີ່ເຮົາເວົ້າ ແລະ ທຸກສິ່ງທີ່ເຮົາເຮັດແມ່ນສະຕິປັນຍາຂອງເຮົາ. ຜູ້ໃດກ້າກໍ່ກວນການຄຸ້ມຄອງຂອງເຮົາ ຫຼື ທຳລາຍແຜນການຂອງເຮົາອີກຄັ້ງ? ເຮົາຈະບໍ່ໃຫ້ອະໄພພວກເຂົາຢ່າງແນ່ນອນ! ເວລາຢູ່ໃນມືຂອງເຮົາ ແລະ ເຮົາບໍ່ຢ້ານການຊັກຊ້າ; ບໍ່ແມ່ນເຮົາບໍທີ່ເປັນຜູ້ກຳນົດວ່າແຜນການຄຸ້ມຄອງຂອງເຮົາຈະສິ້ນສຸດລົງເມື່ອໃດ? ມັນບໍ່ໄດ້ລ້ວນແລ້ວແຕ່ຂຶ້ນຢູ່ກັບຄວາມຄິດດຽວຂອງເຮົາບໍ? ເມື່ອເຮົາເວົ້າວ່າມັນເກີດຂຶ້ນ ມັນກໍເກີດຂຶ້ນ ແລະ ເມື່ອເຮົາເວົ້າວ່າມັນສິ້ນສຸດລົງ ມັນກໍສິ້ນສຸດລົງ. ເຮົາບໍ່ໄດ້ຮີບຮ້ອນ ແລະ ເຮົາຈະດຳເນີນການຈັດແຈງຢ່າງເໝາະສົມ. ຜູ້ຄົນຕ້ອງບໍ່ສອດຮູ້ສອດເຫັນໃນພາລະກິດຂອງເຮົາ ແລະ ພວກເຂົາຕ້ອງບໍ່ເຮັດສິ່ງຕ່າງໆໃຫ້ແກ່ເຮົາ ເຊິ່ງເຮັດຕາມວິທີທີ່ພວກເຂົາພໍໃຈ. ເຮົາສາບແຊ່ງຜູ້ໃດກໍຕາມທີ່ສອດຮູ້ສອດເຫັນ ນັ້ນກໍຄື ນີ້ແມ່ນໜຶ່ງໃນບົດບັນຍັດການປົກຄອງຂອງເຮົາ. ເຮົາປະຕິບັດພາລະກິດຂອງເຮົາດ້ວຍຕົວເອງ ແລະ ເຮົາບໍ່ຕ້ອງການຜູ້ໃດອີກ (ເຮົາອະນຸຍາດຜູ້ໃຫ້ບໍລິການເຫຼົ່ານີ້ເຮັດບໍ່ດັ່ງນັ້ນ ພວກເຂົາກໍຈະບໍ່ກ້າເຮັດຢ່າງໃຈຮ້ອນ ຫຼື ຢ່າງຕາບອດ). ພາລະກິດທັງໝົດແມ່ນຖືກຈັດແຈງໂດຍເຮົາ ແລະ ຖືກຕັດສິນໂດຍເຮົາ ຍ້ອນເຮົາເປັນພຣະເຈົ້າໜຶ່ງດຽວ.

ທຸກຊົນຊາດໃນໂລກຍາດຊິງກັນເອງເພື່ອອຳນາດ ແລະ ຜົນປະໂຫຍດ ແລະ ຕໍ່ສູ້ກັນຍາດດິນແດນ,

ແຕ່ບໍ່ໃຫ້ຕື່ນຕົກໃຈ ຍ້ອນທຸກສິ່ງເຫຼົ່ານີ້ແມ່ນເປັນການຮັບໃຊ້ຂອງເຮົາ. ແລ້ວເປັນຫຍັງເຮົາຈຶ່ງເວົ້າວ່າພວກມັນແມ່ນການຮັບໃຊ້ຂອງເຮົາ? ເຮົາເຮັດສິ່ງຕ່າງໆໂດຍບໍ່ຕ້ອງຍົກນິ້ວມື. ເພື່ອພິພາກສາຊາຕານ, ເຮົາເຮັດໃຫ້ພວກເຂົາໂຕ້ແຍ້ງກັນທ່າມກາງພວກເຂົາເອງກ່ອນ ແລະ ໃນທີ່ສຸດກໍຈະນໍາພວກເຂົາໄປສູ່ຄວາມພິນາດ ແລະ ເຮັດໃຫ້ພວກເຂົາຕົກເປັນເຫຍື່ອກົນອຸບາຍທີ່ມີເລ່ຫຼ່ຽມຂອງພວກເຂົາເອງ (ພວກເຂົາປາຖະໜາທີ່ຈະຍາດຊິງກັນກັບເຮົາເພື່ອອໍານາດ, ແຕ່ພວກເຂົາກໍຈົບລົງດ້ວຍການໃຫ້ບໍລິການແກ່ເຮົາ). ເຮົາພຽງແຕ່ກ່າວ ແລະ ອອກຄໍາສັ່ງຂອງເຮົາ ແລະ ທຸກຄົນກໍເຮັດຕາມສິ່ງທີ່ເຮົາບອກໃຫ້ເຈົ້າເຮັດ ຫຼື ບໍ່ດັ່ງນັ້ນ ເຮົາຈະທໍາລາຍເຈົ້າທັນທີ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນສ່ວນໜຶ່ງຂອງການພິພາກສາຂອງເຮົາ ຍ້ອນເຮົາບັນຊາທຸກສິ່ງ ແລະ ທຸກສິ່ງຖືກກໍານົດໄວ້ໂດຍເຮົາ. ຜູ້ໃດກໍຕາມທີ່ເຮັດຫຍັງກໍຕາມກໍເຮັດຢ່າງບໍ່ສະໝັກໃຈ, ເຮັດໂດຍການຈັດແຈງຂອງເຮົາເອງ. ເຮົາຫວັງວ່າ ພວກເຈົ້າຈະສາມາດເຕັມໄປດ້ວຍສະຕິປັນຍາຂອງເຮົາໃນເຫດການທີ່ຈະເກີດຂຶ້ນໃນອີກບໍ່ດົນ. ຢ່ານໍາໃຊ້ວິທີການທີ່ບໍ່ລະວັງ, ແຕ່ໃຫ້ຫຍັບເຂົ້າໃກ້ເຮົາເລື້ອຍໆຂຶ້ນ ເມື່ອສິ່ງຕ່າງໆເກີດຂຶ້ນກັບພວກເຈົ້າ; ໃຫ້ລະມັດລະວັງ ແລະ ຮອບຄອບໃນທຸກລັກສະນະເພື່ອຫຼີກເວັ້ນບໍ່ໃຫ້ເຮັດຜິດຕໍ່ການຂ້ຽນຕີຂອງເຮົາ ແລະ ເພື່ອຫຼີກເວັ້ນບໍ່ໃຫ້ຕົກເປັນເຫຍື່ອກົນອຸບາຍທີ່ມີເລ່ຫຼ່ຽມຂອງຊາຕານ. ພວກເຈົ້າຄວນໄດ້ຮັບຄວາມເຂົ້າໃຈຈາກພຣະທໍາຂອງເຮົາ, ຮູ້ຈັກສິ່ງທີ່ເຮົາເປັນ ແລະ ເຫັນສິ່ງທີ່ເຮົາມີ. ເຈົ້າຕ້ອງເຮັດສິ່ງຕ່າງໆຕາມທ່າທີ່ງມີຄວາມໝາຍຂອງເຮົາ ແລະ ຕ້ອງບໍ່ປະຕິບັດຢ່າງເລີນເລີ້. ເຮັດສິ່ງທີ່ເຮົາເຮັດ ແລະ ເວົ້າສິ່ງທີ່ເຮົາເວົ້າ. ເຮົາເວົ້າສິ່ງຕ່າງໆຕໍ່ພວກເຈົ້າລ່ວງໜ້າ ເພື່ອວ່າພວກເຈົ້າຈະສາມາດຫຼີກເວັ້ນບໍ່ເຮັດຜິດ ແລະ ຫຼີກເວັ້ນທີ່ຈະຖືກລໍ້ລວງ. "ສິ່ງທີ່ເຮົາເປັນ" ແລະ "ສິ່ງທີ່ເຮົາມີ" ແມ່ນຫຍັງ? ພວກເຈົ້າຮູ້ຈັກແທ້ໆບໍ? ຄວາມເຈັບປວດທີ່ເຮົາທົນທຸກເປັນສ່ວນໜຶ່ງຂອງສິ່ງທີ່ເຮົາເປັນ ຍ້ອນມັນເປັນສ່ວນໜຶ່ງຂອງຄວາມເປັນມະນຸດທີ່ປົກກະຕິຂອງເຮົາ ແລະ ສິ່ງທີ່ເຮົາເປັນຍັງສາມາດພົບໄດ້ໃນຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາ, ພວກເຈົ້າຮູ້ຈັກສິ່ງນີ້ບໍ? ສິ່ງທີ່ເຮົາເປັນປະກອບດ້ວຍສອງລັກສະນະ: ລັກສະນະໜຶ່ງແມ່ນຄວາມເປັນມະນຸດຂອງເຮົາ, ໃນຂະນະທີ່ອີກລັກສະນະໜຶ່ງແມ່ນຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາ. ມີພຽງແຕ່ສອງລັກສະນະເຫຼົ່ານີ້ລວມກັນຈຶ່ງເປັນພຣະເຈົ້າຢ່າງສົມບູນ. ສິ່ງທີ່ເປັນຄວາມເປັນພຣະເຈົ້າຢ່າງສົມບູນຂອງເຮົາຍັງປະກອບມີຫຼາຍສິ່ງທີ່ດີ: ເຮົາບໍ່ທົນທຸກຕໍ່ຂໍ້ຈໍາກັດໂດຍບຸກຄົນໃດໜຶ່ງ, ເລື່ອງໃດໜຶ່ງ ຫຼື ສິ່ງໃດໜຶ່ງ; ເຮົາຢູ່ເໜືອທຸກສະພາບແວດລ້ອມ; ເຮົາຢູ່ເໜືອຂໍ້ຈໍາກັດຂອງເວລາ ຫຼື ອາວະກາດ ຫຼື ພູມສາດ; ເຮົາຮູ້ຈັກທຸກຄົນ, ທຸກເລື່ອງ ແລະ ທຸກສິ່ງຢ່າງແທ້ຈິງ ຄືກັບຮູ້ຈັກຫຼັງມືຂອງເຮົາ; ແລະ ເຖິງຢ່າງໃດກໍຕາມເຮົາກໍຍັງເປັນເນື້ອໜັງ ແລະ ກະດູກ ແລະ ເຮົາຢູ່ໃນຮູບຮ່າງທີ່ສາມາດຈັບຕ້ອງໄດ້; ເຮົາຍັງເປັນບຸກຄົນນີ້ໃນສາຍຕາຂອງຜູ້ຄົນ, ແຕ່ທໍາມະຊາດໄດ້ປ່ຽນແປງ ນັ້ນກໍຄື ມັນບໍ່ແມ່ນເນື້ອໜັງແຕ່ເປັນຮ່າງກາຍ. ສິ່ງເຫຼົ່ານີ້ເປັນພຽງສ່ວນເລັກນ້ອຍຂອງມັນເທົ່ານັ້ນ. ລູກຊາຍກົກທັງໝົດຂອງເຮົາຈະເປັນແບບນີ້ໃນອະນາຄົດເຊັ່ນກັນ; ນີ້ແມ່ນເສັ້ນທາງທີ່ຕ້ອງໄດ້ຍ່າງຕາມ ແລະ ຄົນທີ່ເຖິງວາລະກໍບໍ່ສາມາດຫຼົບໜີໄດ້. ໃນຂະນະທີ່ເຮົາກໍາລັງເຮັດສິ່ງນີ້, ທຸກຄົນທີ່ບໍ່ໄດ້ຖືກກໍານົດໄວ້ລ່ວງໜ້າກໍຈະຖືກເຕະອອກໄປ (ຍ້ອນນີ້ແມ່ນການທີ່ຊາຕານທົດສອບເຮົາເພື່ອເບິ່ງວ່າພຣະທໍາຂອງເຮົາຖືກຕ້ອງ ຫຼື ບໍ່).

ຄົນທີ່ຖືກກຳນົດໄວ້ລ່ວງໜ້າບໍ່ສາມາດຫຼີບໜີມັນໄດ້ ບໍ່ວ່າພວກເຂົາຈະໄປໃສກໍຕາມ ແລະ ພວກເຈົ້າຈະໄດ້ເຫັນຫຼັກການທີ່ຢູ່ເບື້ອງຫຼັງການກະທຳດັ່ງກ່າວນີ້ຂອງເຮົາ. “ສິ່ງທີ່ເຮົາມີ” ໝາຍເຖິງສະຕິປັນຍາຂອງເຮົາ, ຄວາມຮູ້ຂອງເຮົາ, ໄຫວພິບຂອງເຮົາ ແລະ ພຣະທຳທຸກຂໍ້ທີ່ເຮົາກ່າວ. ທັງຄວາມເປັນມະນຸດຂອງເຮົາ ແລະ ຄວາມເປັນພຣະເຈົ້າກໍມີມັນ. ນັ້ນໝາຍຄວາມວ່າ ທຸກສິ່ງທີ່ຖືກດຳເນີນໂດຍຄວາມເປັນມະນຸດຂອງເຮົາ ພ້ອມທັງສິ່ງທີ່ຖືກດຳເນີນໂດຍຄວາມເປັນພຣະເຈົ້າຂອງເຮົາກໍເປັນສິ່ງທີ່ເຮົາມີ; ບໍ່ມີຜູ້ໃດສາມາດເອົາສິ່ງເຫຼົ່ານີ້ໄປ ຫຼື ກຳຈັດພວກມັນໄດ້; ພວກມັນຢູ່ໃນການຄອບຄອງຂອງເຮົາ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງພວກມັນໄດ້. ນີ້ແມ່ນບົດບັນຍັດການປົກຄອງທີ່ຮຸນແຮງທີ່ສຸດຂອງເຮົາ (ຍ້ອນວ່າໃນແນວຄິດຂອງມະນຸດ ຫຼາຍສິ່ງທີ່ເຮົາເຮັດບໍ່ໄດ້ສອດຄ່ອງກັບແນວຄິດຂອງພວກເຂົາ ແລະ ຢູ່ນອກເໜືອຄວາມເຂົ້າໃຈຂອງມະນຸດ; ນີ້ແມ່ນບົດບັນຍັດທີ່ທຸກໆຄົນເຮັດຜິດໄດ້ຢ່າງງ່າຍດາຍທີ່ສຸດ ແລະ ມັນຍັງຮຸນແຮງທີ່ສຸດດ້ວຍ. ສະນັ້ນ ໃນທີ່ນີ້ ຊີວິດຂອງພວກເຂົາຈຶ່ງທົນທຸກກັບການສູນເສຍ). ເຮົາຈະເວົ້າອີກຄັ້ງວ່າ ພວກເຈົ້າຕ້ອງນຳໃຊ້ວິທີການທີ່ຮອບຄອບ ເຊິ່ງເຮົາໄດ້ແນະນຳໃຫ້ພວກເຈົ້າເຮັດ ນັ້ນກໍຄື ພວກເຈົ້າຕ້ອງບໍ່ປະໝາດ!

# ບົດທີ 96

ເຮົາຈະຂ້ຽນຕີທຸກຄົນທີ່ເກີດຈາກເຮົາ ທີ່ຍັງບໍ່ຮູ້ຈັກເຮົາເທື່ອ ເພື່ອເຮັດໃຫ້ເປັນທີ່ປະຈັກເຖິງຄວາມໂກດຮ້າຍທັງໝົດຂອງເຮົາ, ອຳນາດທີ່ຍິ່ງໃຫຍ່ຂອງເຮົາ ແລະ ສະຕິປັນຍາທີ່ສົມບູນຂອງເຮົາ. ພາຍໃນຕົວເຮົາ ທຸກຢ່າງແມ່ນຊອບທຳ ແລະ ບໍ່ມີຄວາມບໍ່ຊອບທຳ, ບໍ່ມີການຫຼອກລວງ ແລະ ບໍ່ມີຄວາມຄົດໂກງຢ່າງແນ່ນອນ; ຜູ້ໃດກໍຕາມທີ່ຄົດໂກງ ແລະ ຫຼອກລວງຕ້ອງແມ່ນບຸດຊາຍຂອງນະຮົກເຊິ່ງເກີດໃນແດນມໍລະນາ. ພາຍໃນຕົວເຮົາ ທຸກຢ່າງແມ່ນເປີດເຜີຍ; ແມ່ນຫຍັງກໍຕາມທີ່ເຮົາກ່າວແມ່ນຈະຕ້ອງຖືກເຮັດໃຫ້ສຳເລັດ ແລະ ຈະຖືກເຮັດໃຫ້ສຳເລັດຢ່າງແນ່ນອນ; ແມ່ນຫຍັງກໍຕາມທີ່ເຮົາກ່າວແມ່ນຈະຖືກສ້າງຕັ້ງ, ຈະຖືກສ້າງຕັ້ງຂຶ້ນ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງ ຫຼື ຮຽນແບບສິ່ງເຫຼົ່ານີ້ໄດ້ ຍ້ອນວ່າເຮົາແມ່ນພຣະເຈົ້າພຽງຜູ້ດຽວ. ໃນສິ່ງທີ່ຈະມາເຖິງ, ທຸກຄົນທີ່ຢູ່ໃນກຸ່ມບຸດຊາຍກົກຂອງເຮົາ ທີ່ຖືກກຳນົດໄວ້ລ່ວງໜ້າ ແລະ ຖືກເລືອກແມ່ນຈະຖືກເປີດເຜີຍເທື່ອລະຄົນ ແລະ ທຸກຄົນທີ່ບໍ່ໄດ້ຢູ່ໃນກຸ່ມບຸດຊາຍກົກກໍຈະຖືກເຮົາກຳຈັດຜ່ານສິ່ງນີ້. ນີ້ແມ່ນວິທີທີ່ເຮົາປະຕິບັດ ແລະ ເຮັດໃຫ້ສຳເລັດພາລະກິດຂອງເຮົາ. ຕອນນີ້ ເຮົາເປີດໂປງພຽງແຕ່ບາງຄົນເທົ່ານັ້ນເພື່ອວ່າ ບຸດຊາຍກົກຂອງເຮົາຈະສາມາດເຫັນການກະທຳອັນມະຫັດສະຈັນຂອງເຮົາ ແຕ່ຫຼັງຈາກນັ້ນ ເຮົາຈະບໍ່ປະຕິບັດພາລະກິດດ້ວຍວິທີນີ້. ກົງກັນຂ້າມ, ເຮົາຈະດຳເນີນຈາກສະຖານະການທົ່ວໄປ ແທນທີ່ຈະປ່ອຍໃຫ້ພວກເຂົາສະແດງທາດແທ້ຂອງພວກເຂົາອອກມາເທື່ອລະຄົນ (ຍ້ອນໂດຍທົ່ວໄປແລ້ວ ພວກຜີສາດແມ່ນຄືກັນໝົດ ແລະ ມັນພຽງພໍທີ່ຈະເລືອກເອົາບາງໂຕເທົ່ານັ້ນເພື່ອເປັນຕົວຢ່າງ). ບຸດຊາຍກົກຂອງເຮົາທັງໝົດແມ່ນມີຄວາມຊັດເຈນໃນໃຈຂອງພວກເຂົາ ແລະ ບໍ່ຈຳເປັນຕ້ອງໃຫ້ເຮົາອະທິບາຍ (ເພາະໃນເວລາທີ່ນັດໝາຍ ພວກເຂົາຈະຖືກເປີດເຜີຍເທື່ອລະຄົນຢ່າງແນ່ນອນ).

ມັນແມ່ນອຸປະນິໄສຂອງເຮົາທີ່ຈະຮັກສາສັນຍາຂອງເຮົາ ແລະ ໃນຕົວເຮົາແມ່ນບໍ່ມີຫຍັງຖືກເຊື່ອງ ຫຼື ປິດບັງ. ເຮົາຈະບອກພວກເຈົ້າກ່ຽວກັບທຸກສິ່ງທີ່ພວກເຈົ້າຕ້ອງເຂົ້າໃຈ ແລະ ເຮົາຈະບໍ່ບອກພວກເຈົ້າໃນສິ່ງທີ່ພວກເຈົ້າບໍ່ຄວນຮູ້ຢ່າງແນ່ນອນ ໂດຍຢ້ານວ່າພວກເຈົ້າຈະສາມາດຢືນຢັດໄດ້. ຈົ່ງຢ່າຍຶດຕິດກັບສິ່ງເລັກນ້ອຍ ແລະ ສູນເສຍສິ່ງທີ່ສຳຄັນຍ້ອນເຫດນັ້ນ. ມັນບໍ່ຄຸ້ມແທ້ໆ. ຈົ່ງເຊື່ອວ່າເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ ແລະ ຫຼັງຈາກນັ້ນ ທຸກສິ່ງກໍຈະສຳເລັດລົງ ແລະ ທຸກຢ່າງກໍຈະງ່າຍ ແລະ ເປັນທີ່ພໍໃຈ. ນີ້ແມ່ນວິທີທີ່ເຮົາປະຕິບັດສິ່ງຕ່າງໆ. ໃຜກໍຕາມທີ່ເຊື່ອ ແມ່ນເຮົາຈະອະນຸຍາດໃຫ້ເຂົາເຫັນ ແລະ ໃຜກໍຕາມທີ່ບໍ່ເຊື່ອ ແມ່ນເຮົາຈະບໍ່ອະນຸຍາດໃຫ້ເຂົາຮູ້ຈັກ ແລະ ເຮົາຈະບໍ່ມີວັນໃຫ້ເຂົາເຂົ້າໃຈ. ພາຍໃນຕົວເຮົາແມ່ນບໍ່ມີຄວາມຮູ້ສຶກ ຫຼື ຄວາມເມດຕາ ແລະ ບໍ່ວ່າໃຜຈະລ່ວງເກີນການຂ້ຽນຕີຂອງເຮົາ ເຮົາກໍຈະຂ້າພວກເຂົາໂດຍທີ່ບໍ່ຢັບຢັ້ງມືຂອງເຮົາຢ່າງແນ່ນອນ ແລະ ເຮົາຈະປະຕິບັດກັບພວກເຂົາທຸກຄົນຄືກັນໝົດ. ເຮົາປະຕິບັດກັບທຸກຄົນຄືກັນໝົດ. ເຮົາບໍ່ມີຄວາມຮູ້ສຶກສ່ວນຕົວ ແລະ ບໍ່ກະທຳການໃນທາງໃດທາງໜຶ່ງດ້ວຍອາລົມ. ຜູ້ຄົນບໍ່ເຫັນຄວາມຊອບທຳ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາຜ່ານສິ່ງນີ້ໄດ້ແນວໃດ? ນີ້ແມ່ນສະຕິປັນຍາຂອງເຮົາ ແລະ ອຸປະນິໄສ

ຂອງເຮົາ ເຊິ່ງບໍ່ມີຜູ້ໃດສາມາດປ່ຽນແປງໄດ້ ແລະ ບໍ່ມີຜູ້ໃດສາມາດຮູ້ຈັກຢ່າງຄົບຖ້ວນ. ມືຂອງເຮົາແມ່ນສັ່ງການທຸກສິ່ງຕະຫຼອດເວລາ ແລະ ເຮົາຈັດກຽມທຸກຢ່າງຕະຫຼອດເວລາເພື່ອໃຫ້ບໍລິການແກ່ເຮົາເມື່ອເຮົາຕ້ອງການ. ຄົນຈຳນວນຫຼາຍກຳລັງໃຫ້ບໍລິການໃນນາມຂອງເຮົາ ເພື່ອປະຕິບັດແຜນການຄຸ້ມຄອງຂອງເຮົາໃຫ້ສຳເລັດ ແຕ່ໃນທີ່ສຸດແລ້ວ ພວກເຂົາເຫັນພອນ ແຕ່ບໍ່ສາມາດຮັບພອນໄດ້. ຈັ່ງແມ່ນໜ້າເວດທະນາແທ້ເດ! ແຕ່ບໍ່ມີໃຜສາມາດປ່ຽນໃຈເຮົາໄດ້. ນີ້ແມ່ນພຣະດຳລັດແຫ່ງການປົກຄອງຂອງເຮົາ (ເມື່ອໃດກໍຕາມທີ່ພຣະດຳລັດແຫ່ງການປົກຄອງຖືກກ່າວເຖິງ, ນີ້ກໍໝາຍເຖິງບາງສິ່ງທີ່ບໍ່ມີຜູ້ໃດສາມາດປ່ຽນແປງໄດ້, ສະນັ້ນ ເມື່ອເຮົາກ່າວໃນອະນາຄົດ ແລະ ຖ້າເຮົາໄດ້ຕັ້ງໃຈຂອງເຮົາໃສ່ບາງສິ່ງ, ນັ້ນກໍແມ່ນພຣະດຳລັດແຫ່ງການປົກຄອງຂອງເຮົາຢ່າງແນ່ນອນ. ຈົ່ງຈື່ໄວ້! ຈົ່ງຢ່າລ່ວງເກີນສິ່ງນີ້ອີກ ບໍ່ສະນັ້ນ ພວກເຈົ້າຈະໄດ້ທົນທຸກກັບການສູນເສຍ) ແລະ ມັນຍັງແມ່ນສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງເຮົາ. ມັນແມ່ນພາລະກິດຂອງເຮົາເອງ ແລະ ບໍ່ແມ່ນບາງສິ່ງທີ່ມະນຸດຄົນໃດກໍສາມາດເຮັດໄດ້. ເຮົາຕ້ອງປະຕິບັດສິ່ງນີ້. ເຮົາຕ້ອງຈັດກຽມສິ່ງນີ້ ເຊິ່ງພຽງພໍທີ່ຈະສະແດງເຖິງອຳນາດອັນໄພສານຂອງເຮົາ ແລະ ເພື່ອສະແດງຄວາມໂກດຮ້າຍຂອງເຮົາ.

ຄົນສ່ວນໃຫຍ່ຍັງບໍ່ຮູ້ຈັກ ແລະ ບໍ່ຊັດເຈນກ່ຽວກັບຄວາມເປັນມະນຸດຂອງເຮົາ. ເຮົາໄດ້ກ່າວມັນຫຼາຍຄັ້ງ ແຕ່ພວກເຈົ້າຍັງບໍ່ຊັດເຈນ ແລະ ບໍ່ເຂົ້າໃຈຫຼາຍ. ແຕ່ນີ້ແມ່ນພາລະກິດຂອງເຮົາ ແລະ ຕອນນີ້, ໃນເວລານີ້, ໃຜກໍຕາມທີ່ຮູ້ຈັກແມ່ນຮູ້ຈັກ ແລະ ໃຜກໍຕາມທີ່ບໍ່ຮູ້ຈັກ ເຮົາກໍຈະບໍ່ບັງຄັບ. ມັນສາມາດເປັນແບບນີ້ເທົ່ານັ້ນ. ເຮົາໄດ້ກ່າວກ່ຽວກັບສິ່ງນັ້ນດ້ວຍຄວາມຊັດເຈນ ແລະ ຫຼັງຈາກນັ້ນ ເຮົາຈະບໍ່ກ່າວເຖິງມັນອີກ (ເພາະເຮົາໄດ້ກ່າວຫຼາຍແລ້ວ ແລະ ເຮົາໄດ້ກ່າວຢ່າງຊັດເຈນຫຼາຍແລ້ວ. ຜູ້ທີ່ຮູ້ຈັກເຮົາແມ່ນມີພາລະກິດຂອງພຣະວິນຍານບໍລິສຸດຢ່າງແນ່ນອນ ແລະ ແມ່ນບຸດຊາຍກົກຂອງເຮົາຢ່າງບໍ່ຕ້ອງສົງໄສ. ຜູ້ທີ່ບໍ່ຮູ້ຈັກເຮົາບໍ່ແມ່ນບຸດຊາຍກົກຂອງເຮົາໂດຍບໍ່ຕ້ອງສົງໄສ ເຊິ່ງພິສູດໃຫ້ເຫັນວ່າ ເຮົາໄດ້ຖອນພຣະວິນຍານຂອງເຮົາຈາກເຂົາແລ້ວ). ແຕ່ໃນທີ່ສຸດແລ້ວ, ເຮົາຈະເຮັດໃຫ້ທຸກຄົນຮູ້ຈັກເຮົາ ໂດຍໃຫ້ຮູ້ຈັກເຮົາຢ່າງສົມບູນ ທັງໃນຄວາມເປັນມະນຸດຂອງເຮົາ ແລະ ໃນຄວາມເປັນພຣະເຈົ້າຂອງເຮົາ. ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຕ່າງໆຂອງພາລະກິດຂອງເຮົາ ແລະ ເຮົາຕ້ອງປະຕິບັດພາລະກິດດ້ວຍວິທີນີ້. ນີ້ຍັງແມ່ນພຣະດຳລັດແຫ່ງການປົກຄອງຂອງເຮົາ. ທຸກຄົນຕ້ອງເອີ້ນເຮົາວ່າພຣະເຈົ້າທີ່ແທ້ຈິງພຽງອົງດຽວ ແລະ ສັນລະເສີນ ແລະ ສິ່ງສຽງເຊຍເຮົາໂດຍບໍ່ຢຸດເຊົາ.

ແຜນການຄຸ້ມຄອງຂອງເຮົາໄດ້ສຳເລັດຢ່າງສົມບູນແລ້ວ ແລະ ທຸກສິ່ງກໍໄດ້ບັນລຸແຕ່ດົນແລ້ວ. ໃນສາຍຕາຂອງມະນຸດ, ເບິ່ງຄືກັບວ່າ ພາລະກິດຫຼາຍຢ່າງຂອງເຮົາແມ່ນຍັງດຳເນີນຢູ່ ແຕ່ເຮົາໄດ້ຈັດກຽມມັນຢ່າງຖືກຕ້ອງແລ້ວ ແລະ ສິ່ງດຽວທີ່ຍັງລໍຖ້າແມ່ນການເຮັດໃຫ້ມັນສຳເລັດ ຕາມຂັ້ນຕອນຂອງເຮົາ ທີ່ເປັນການເຮັດເທື່ອລະໜ້າວຽກ (ນີ້ກໍເພາະວ່າ ກ່ອນການຊົງສ້າງໂລກ ເຮົາໄດ້ກຳນົດລ່ວງໜ້າຜູ້ທີ່ຈະສາມາດຕັ້ງໝັ້ນພາຍໃຕ້ການທົດລອງ, ຜູ້ທີ່ບໍ່ສາມາດຖືກເລືອກ ແລະ ກຳນົດລ່ວງໜ້າໂດຍເຮົາ ແລະ ຜູ້ທີ່ບໍ່ສາມາດແບ່ງປັນຄວາມທົນທຸກຂອງເຮົາ. ຜູ້ທີ່ສາມາດແບ່ງປັນຄວາມທົນທຸກຂອງເຮົາ ນັ້ນກໍຄື ຜູ້ທີ່ຖືກເຮົາກຳນົດລ່ວງໜ້າ ແລະ ເລືອກໄວ້, ເຮົາຈະຮັກສາພວກເຂົາໄວ້ ແລະ ເຮັດໃຫ້ພວກເຂົາ

ສາມາດຂ້າມຜ່ານທຸກສິ່ງຢ່າງແນ່ນອນ). ເຮົາມີຄວາມຊັດເຈນຢູ່ໃນໃຈຂອງເຮົາ ກ່ຽວກັບບົດບາດຂອງແຕ່ລະຄົນ. ເຮົາຮູ້ດີວ່າ ຜູ້ໃດຈະໃຫ້ບໍລິການແກ່ເຮົາ, ຜູ້ໃດແມ່ນບຸດຊາຍກົກ ແລະ ຜູ້ໃດທີ່ຢູ່ທ່າມກາງບຸດຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາ. ເຮົາຮູ້ຈັກສິ່ງນີ້ຄືກັບຫຼັງມືຂອງເຮົາ. ໃຜກໍຕາມທີ່ເຮົາໄດ້ກ່າວເຖິງໃນອະດີດວ່າ ເປັນບຸດຊາຍກົກກໍຍັງເປັນບຸດຊາຍກົກໃນຕອນນີ້ ແລະ ໃຜກໍຕາມທີ່ເຮົາໄດ້ກ່າວໃນອະດີດວ່າ ບໍ່ແມ່ນບຸດຊາຍກົກກໍຍັງບໍ່ແມ່ນບຸດຊາຍກົກໃນຕອນນີ້. ເຮົາບໍ່ເສຍໃຈກັບສິ່ງທີ່ເຮົາໄດ້ກະທຳໄປ ແລະ ບໍ່ໄດ້ປ່ຽນແປງມັນຢ່າງງ່າຍດາຍ. ເຮົາຕັ້ງໃຈໃນສິ່ງທີ່ເຮົາກ່າວ (ພາຍໃນຕົວເຮົາແມ່ນບໍ່ມີສິ່ງໃດທີ່ບໍ່ສຳຄັນ) ແລະ ມັນບໍ່ເຄີຍປ່ຽນ! ຜູ້ທີ່ໃຫ້ບໍລິການແກ່ເຮົາຈະໃຫ້ບໍລິການແກ່ເຮົາຕະຫຼອດ: ພວກເຂົາແມ່ນງົວຄວາຍຂອງເຮົາ; ພວກເຂົາແມ່ນມ້າຂອງເຮົາ (ແຕ່ຜູ້ຄົນເຫຼົ່ານີ້ບໍ່ເຄີຍໄດ້ຮັບແສງສະຫວ່າງໃນວິນຍານຂອງພວກເຂົາ; ເມື່ອເຮົາໃຊ້ພວກເຂົາ ພວກເຂົາກໍມີປະໂຫຍດ ແຕ່ເມື່ອເຮົາບໍ່ໃຊ້ພວກເຂົາ ເຮົາກໍຂ້າພວກເຂົາ. ເມື່ອເຮົາກ່າວເຖິງງົວຄວາຍ ແລະ ມ້າ, ເຮົາໝາຍເຖິງຜູ້ທີ່ບໍ່ໄດ້ຮັບແສງສະຫວ່າງໃນວິນຍານຂອງພວກເຂົາ, ຜູ້ທີ່ບໍ່ຮູ້ຈັກເຮົາ ແລະ ຜູ້ທີ່ບໍ່ເຊື່ອຟັງເຮົາ ແລະ ເຖິງວ່າພວກເຂົາເຊື່ອຟັງ ແລະ ອ່ອນນ້ອມ ແລະ ທຳມະດາ ແລະ ສັດຊື່, ພວກເຂົາກໍຍັງແມ່ນງົວຄວາຍ ແລະ ມ້າແທ້ໆ). ຕອນນີ້ ຄົນສ່ວນໃຫຍ່ບໍ່ມີເຫດຜົນ ແລະ ບໍ່ມີລະບຽບເມື່ອຢູ່ຕໍ່ໜ້າເຮົາ ໂດຍເວົ້າ ແລະ ຫົວຢ່າງວຸ້ນວາຍ ແລະ ປະພຶດຕົນຢ່າງບໍ່ມີຄວາມເຄົາລົບ. ພວກເຂົາເຫັນແຕ່ຄວາມເປັນມະນຸດຂອງເຮົາເທົ່ານັ້ນ ແລະ ບໍ່ໄດ້ເຫັນຄວາມເປັນພຣະເຈົ້າຂອງເຮົາ. ໃນຄວາມເປັນມະນຸດຂອງເຮົາ, ພຶດຕິກຳເຫຼົ່ານີ້ແມ່ນສາມາດຜ່ານໄປໄດ້ ແລະ ເຮົາສາມາດຝືນໃຈຕົວເອງເພື່ອໃຫ້ອະໄພພວກເຂົາ ແຕ່ໃນຄວາມເປັນພຣະເຈົ້າຂອງເຮົາແມ່ນບໍ່ງ່າຍເລີຍ. ໃນອະນາຄົດ, ເຮົາຈະຕັດສິນວ່າ ເຈົ້າໄດ້ກະທຳບາບໃນການໝິ່ນປະໝາດ. ເວົ້າອີກແບບໜຶ່ງກໍຄື ຄວາມເປັນມະນຸດຂອງເຮົາແມ່ນສາມາດຖືກລ່ວງເກີນໄດ້ ແຕ່ຄວາມເປັນພຣະເຈົ້າແມ່ນບໍ່ສາມາດຖືກລ່ວງເກີນໄດ້ ແລະ ໃຜກໍຕາມທີ່ຂັດແຍ້ງກັບເຮົາແມ່ນແຕ່ໜ້ອຍດຽວເຮົາກໍຈະພິພາກສາທັນທີໂດຍບໍ່ມີການຊັກຊ້າ. ຈົ່ງຢ່າຄິດວ່າ ຍ້ອນເຈົ້າໄດ້ພົວພັນເປັນເວລາຫຼາຍປີກັບຄົນຜູ້ນີ້ທີ່ເຮົາເປັນ ແລະ ໄດ້ຄຸ້ນເຄີຍກັບເຮົາ, ເຈົ້າຈະສາມາດເວົ້າ ແລະ ກະທຳການຢ່າງບໍ່ມີເຫດຜົນ. ເຮົາບໍ່ສົນໃຈແທ້ໆ! ບໍ່ວ່າມັນຈະແມ່ນໃຜກໍຕາມ, ເຮົາຈະປະຕິບັດກັບພວກເຂົາດ້ວຍຄວາມຊອບທຳ. ນີ້ຄືຄວາມຊອບທຳຂອງເຮົາ.

ຄວາມລຶກລັບຂອງເຮົາແມ່ນຖືກເປີດເຜີຍຕໍ່ຜູ້ຄົນໃນແຕ່ລະມື້ ແລະ ພວກເຂົາໄດ້ມີຄວາມຊັດເຈນຂຶ້ນໃນແຕ່ລະມື້ ພາຍຫຼັງຂັ້ນຕອນການເປີດເຜີຍ ເຊິ່ງພຽງພໍທີ່ຈະສະແດງໃຫ້ເຫັນເຖິງຄວາມໄວຂອງພາລະກິດຂອງເຮົາ. ນີ້ແມ່ນສະຕິປັນຍາຂອງເຮົາ (ເຮົາບໍ່ກ່າວມັນໂດຍກົງ. ເຮົາໃຫ້ແສງສະຫວ່າງແກ່ບຸດຊາຍກົກຂອງເຮົາ ແລະ ເຮັດໃຫ້ລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່ຕາບອດ). ນອກຈາກນັ້ນ, ໃນປັດຈຸບັນ ເຮົາຈະເປີດເຜີຍຄວາມລຶກລັບຂອງເຮົາໃຫ້ກັບພວກເຈົ້າຜ່ານບຸດຊາຍຂອງເຮົາ. ເຮົາຈະເປີດເຜີຍສິ່ງຕ່າງໆທີ່ຜູ້ຄົນຄິດບໍ່ເຖິງໃຫ້ກັບພວກເຈົ້າໃນມື້ນີ້ ເພື່ອໃຫ້ພວກເຈົ້າຮູ້ຈັກຢ່າງລະອຽດ ແລະ ມີຄວາມເຂົ້າໃຈທີ່ຊັດເຈນ. ຍິ່ງໄປກວ່ານັ້ນ, ຄວາມລຶກລັບນີ້ແມ່ນມີຢູ່ໃນທຸກຄົນນອກຈາກບຸດຊາຍກົກຂອງເຮົາ ແຕ່ບໍ່ມີຜູ້ໃດສາມາດເຂົ້າໃຈມັນໄດ້. ເຖິງວ່າມັນຊິຢູ່ພາຍໃນແຕ່ລະຄົນ ແຕ່ບໍ່ມີໃຜ

ສາມາດຮັບຮູ້ມັນໄດ້. ເຮົາກຳລັງກ່າວຫຍັງ? ໃນພາລະກິດຂອງເຮົາ ແລະ ໃນພຣະຄຳຂອງເຮົາໃນຊ່ວງໄລຍະນີ້, ເຮົາມັກຈະກ່າວເຖິງມັງກອນແດງຜູ້ຍິ່ງໃຫຍ່, ຊາຕານ, ຜີຮ້າຍ ແລະ ອັກຄະເທວະດາ. ພວກເຂົາແມ່ນຫຍັງ? ສາຍພົວພັນຂອງພວກເຂົາແມ່ນຫຍັງ? ແມ່ນຫຍັງທີ່ສະແດງອອກໃນສິ່ງເຫຼົ່ານີ້? ການສະແດງອອກຂອງມັງກອນແດງຜູ້ຍິ່ງໃຫຍ່ແມ່ນການຕໍ່ຕ້ານເຮົາ, ການຂາດຄວາມເຂົ້າໃຈ ແລະ ການຂາດການຢັ່ງຮູ້ເຖິງຄວາມໝາຍຂອງພຣະທຳຂອງເຮົາ, ການຂົ່ມເຫັງເຮົາເປັນປະຈຳ ແລະ ການສະແຫວງຫາທີ່ຈະໃຊ້ແຜນອຸບາຍ ເພື່ອຂັດຂວາງການຄຸ້ມຄອງຂອງເຮົາ. ຊາຕານແມ່ນຖືກສະແດງອອກດັ່ງນີ້: ການດິ້ນຮົນຍາດອຳນາດຈາກເຮົາ, ຄວາມຕ້ອງການທີ່ຈະຄອບຄອງຜູ້ຄົນທີ່ຖືກເລືອກຂອງເຮົາ ແລະ ການປ່ອຍຖ້ອຍຄຳທີ່ບໍ່ດີເພື່ອຫຼອກລວງປະຊາຊົນຂອງເຮົາ. ການສະແດງອອກຂອງຜີຮ້າຍ (ຜູ້ທີ່ບໍ່ຍອມຮັບເອົານາມຂອງເຮົາ ແລະ ຜູ້ທີ່ບໍ່ເຊື່ອລ້ວນແລ້ວແຕ່ແມ່ນຜີຮ້າຍ) ແມ່ນມີດັ່ງນີ້: ການປາດຖະໜາຄວາມສຸກທາງເນື້ອໜັງ, ລວມເຖິງການປ່ອຍຕົວໄປກັບຕັນຫາທີ່ຊົ່ວຮ້າຍ, ການດຳລົງຊີວິດໂດຍເປັນທາດຂອງຊາຕານ, ບາງຄົນຕໍ່ຕ້ານເຮົາ ແລະ ບາງຄົນສະໜັບສະໜູນເຮົາ (ແຕ່ບໍ່ໄດ້ພິສູດວ່າ ພວກເຂົາແມ່ນບຸດຊາຍທີ່ເປັນທີ່ຮັກຂອງເຮົາ). ການສະແດງອອກຂອງອັກຄະເທວະດາແມ່ນມີດັ່ງນີ້: ການເວົ້າອວດດີ, ການຜິດສິນລະທຳ, ການໃຊ້ນໍ້າສຽງຂອງເຮົາເປັນປະຈຳ ເພື່ອສັ່ງສອນຜູ້ຄົນ, ການສົນໃຈກັບການຮຽນແບບເຮົາທາງພາຍນອກເທົ່ານັ້ນ, ການກິນສິ່ງທີ່ເຮົາກິນ ແລະ ໃຊ້ສິ່ງທີ່ເຮົາໃຊ້; ເວົ້າສັ້ນໆກໍຄື ຄວາມຕ້ອງການທີ່ຈະທຽບເທົ່າກັບເຮົາ, ການມີຄວາມທະເຍີທະຍານ ແຕ່ຂາດຄວາມສາມາດຂອງເຮົາ ແລະ ບໍ່ມີຊີວິດຂອງເຮົາ ແລະ ເປັນສິ່ງທີ່ບໍ່ມີປະໂຫຍດ. ຊາຕານ, ຜີຮ້າຍ ແລະ ອັກຄະເທວະດາແມ່ນການສະແດງອອກທີ່ເປັນຕົວຢ່າງຂອງມັງກອນແດງຜູ້ຍິ່ງໃຫຍ່, ສະນັ້ນ ຜູ້ທີ່ບໍ່ໄດ້ຖືກເຮົາກຳນົດລ່ວງໜ້າ ແລະ ບໍ່ໄດ້ຖືກເລືອກລ້ວນແລ້ວແຕ່ແມ່ນລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່. ມັນເປັນແບບນີ້ແທ້ໆ! ພວກເຫຼົ່ານີ້ທັງໝົດແມ່ນສັດຕູຂອງເຮົາ. (ຢ່າງໃດກໍຕາມ, ການຂັດຂວາງຂອງຊາຕານແມ່ນຖືກແຍກອອກ. ຖ້າທຳມະຊາດຂອງເຈົ້າແມ່ນຄຸນນະພາບຂອງເຮົາ ກໍບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ຍ້ອນໃນຕອນນີ້ ເຈົ້າຍັງດຳລົງຊີວິດໃນເນື້ອໜັງ, ເຈົ້າກໍຈະຜະເຊີນກັບການລໍ້ລວງຂອງຊາຕານເປັນຄັ້ງຄາວ. ສິ່ງນີ້ແມ່ນຫຼີກຫຼ່ຽງບໍ່ໄດ້ ແຕ່ເຈົ້າຕ້ອງລະມັດລະວັງຢູ່ຕະຫຼອດ). ດັ່ງນັ້ນ, ເຮົາຈະປະຖິ້ມລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່ອອກຈາກບຸດຊາຍກົກຂອງເຮົາ. ທຳມະຊາດຂອງພວກເຂົາແມ່ນບໍ່ມີວັນທີ່ຈະສາມາດປ່ຽນແປງໄດ້ ເພາະມັນແມ່ນຄຸນນະພາບຂອງຊາຕານ. ພວກເຂົາສະແດງອອກເຖິງຜີຮ້າຍ ແລະ ມັນແມ່ນຫົວໜ້າທູດສະຫວັນທີ່ພວກເຂົາດຳລົງຢູ່. ສິ່ງນີ້ຖືກຕ້ອງແທ້ໆ. ມັງກອນແດງຜູ້ຍິ່ງໃຫຍ່ທີ່ເຮົາກ່າວເຖິງບໍ່ແມ່ນມັງກອນແດງໂຕໃຫຍ່; ກົງກັນຂ້າມ ມັນແມ່ນຈິດວິນຍານຊົ່ວຮ້າຍທີ່ຕໍ່ຕ້ານເຮົາ ເຊິ່ງ “ມັງກອນແດງຜູ້ຍິ່ງໃຫຍ່” ແມ່ນຄຳສັບທີ່ມີຄວາມໝາຍຄືກັນ. ສະນັ້ນ, ຈິດວິນຍານທັງໝົດນອກຈາກພຣະວິນຍານບໍລິສຸດແມ່ນຈິດວິນຍານທີ່ຊົ່ວຮ້າຍ ແລະ ຍັງສາມາດເວົ້າໄດ້ວ່າເປັນລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່. ສິ່ງນີ້ຄວນຈະມີຄວາມຊັດເຈນທີ່ສຸດກັບທຸກຄົນ.

# ບົດທີ 97

ເຮົາຈະເຮັດໃຫ້ທຸກໆຄົນໄດ້ເຫັນການກະທຳທີ່ອັດສະຈັນຂອງເຮົາ ແລະ ໄດ້ຍິນພຣະທຳທີ່ມີສະຕິປັນຍາຂອງເຮົາ. ນີ້ຕ້ອງລວມເຖິງທຸກໆຄົນ ແລະ ມັນຕ້ອງເກີດຂຶ້ນຜ່ານທຸກໆສິ່ງ. ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ ແລະ ນີ້ແມ່ນຄວາມໂກດຮ້າຍຂອງເຮົາ. ເຮົາຈະສຳຜັດທຸກໆຄົນ ແລະ ທຸກໆເລື່ອງ ເພື່ອວ່າທຸກຄົນທີ່ຢູ່ທຸກຫົນແຫ່ງໃນຈັກກະວານ ແລະ ຈົນສຸດປາຍແຜ່ນດິນໂລກຈະໄດ້ເຫັນດ້ວຍຕາຂອງພວກເຂົາເອງ; ເຮົາຈະບໍ່ຢຸດຈັກເທື່ອ ຈົນກວ່າສິ່ງນີ້ໄດ້ຖືກບັນລຸແລ້ວ. ຄວາມໂກດຮ້າຍຂອງເຮົາໄດ້ຖອກເທອອກຢ່າງຄົບຖ້ວນ ໂດຍບໍ່ຖືກກັກໄວ້ແມ່ນແຕ່ໜ້ອຍດຽວ. ມັນແນໃສ່ທຸກໆຄົນທີ່ຍອມຮັບນາມນີ້ (ອີກບໍ່ດົນ ມັນຈະຖືກຫັນໄປສູ່ທຸກຊົນຊາດເທິງແຜ່ນດິນໂລກ). ແລ້ວຄວາມໂກດຮ້າຍນີ້ແມ່ນຫຍັງ? ມັນຮຸນແຮງສໍ່າໃດ? ຄວາມໂກດຮ້າຍຂອງເຮົາຈະເກີດຂຶ້ນກັບຄົນປະເພດໃດ? ຄົນສ່ວນໃຫຍ່ຄິດວ່າຄວາມໂກດຮ້າຍແມ່ນຄວາມໃຈຮ້າຍລະດັບທີ່ຮຸນແຮງທີ່ສຸດ, ແຕ່ນີ້ກໍບໍ່ໄດ້ອະທິບາຍມັນຢ່າງເຕັມສ່ວນ. ຄວາມໂກດຮ້າຍຂອງເຮົາ ແລະ ບົດບັນຍັດການປົກຄອງຂອງເຮົາແມ່ນສອງສ່ວນທີ່ບໍ່ສາມາດແຍກອອກຈາກກັນໄດ້; ເມື່ອເຮົາອອກບົດບັນຍັດການປົກຄອງຂອງເຮົາ, ຄວາມໂກດຮ້າຍກໍຕາມໆກັນມາ. ແລ້ວຄວາມໂກດຮ້າຍແມ່ນຫຍັງກັນແທ້? ຄວາມໂກດຮ້າຍແມ່ນລະດັບການພິພາກສາທີ່ເຮົາຕັດສິນໃຫ້ກັບຜູ້ຄົນ ແລະ ມັນແມ່ນຫຼັກການທີ່ຢູ່ເບື້ອງຫຼັງການອອກບົດບັນຍັດການປົກຄອງໃດໜຶ່ງຂອງເຮົາ. ຜູ້ໃດກໍຕາມທີ່ເຮັດຜິດຕໍ່ໜຶ່ງໃນບົດບັນຍັດຂອງເຮົາ, ຄວາມໂກດຮ້າຍຂອງເຮົາກໍຈະມີຂະໜາດຄ້າຍຄືກັນ ໂດຍຂຶ້ນກັບວ່າໄດ້ເຮັດຜິດບົດບັນຍັດອັນໃດ. ເມື່ອປາກົດມີຄວາມໂກດຮ້າຍຂອງເຮົາ, ມັນກໍແນ່ນອນວ່າມີບົດບັນຍັດການປົກຄອງຂອງເຮົາເຊັ່ນກັນ ແລະ ໃນທຳນອງກັບກັນ. ບົດບັນຍັດການປົກຄອງ ແລະ ຄວາມໂກດຮ້າຍຂອງເຮົາປະກອບກັນເປັນສ່ວນສົມບູນທີ່ບໍ່ສາມາດແຍກອອກຈາກກັນໄດ້. ມັນຄືການພິພາກສາທີ່ຮຸນແຮງທີ່ສຸດ ເຊິ່ງບໍ່ມີຜູ້ໃດອາດລະເມີດໄດ້. ທຸກຄົນຕ້ອງປະຕິບັດຕາມມັນ ຫຼື ບໍ່ດັ່ງນັ້ນ ພວກເຂົາກໍບໍ່ສາມາດຫຼີກເວັ້ນທີ່ຈະຖືກມືຂອງເຮົາໂຈມຕີໄດ້ຢ່າງງ່າຍດາຍ. ຜູ້ຄົນບໍ່ເຄີຍຮູ້ເຖິງມັນເລີຍຕະຫຼອດຍຸກຕ່າງໆ (ເຖິງແມ່ນມີບາງຄົນທີ່ທົນທຸກຕໍ່ຄວາມເຈັບປວດທີ່ເກີດຂຶ້ນຈາກໄພພິບັດທີ່ຍິ່ງໃຫຍ່, ພວກເຂົາກໍຍັງບໍ່ຮູ້ຈັກມັນເລີຍ; ເຖິງຢ່າງໃດກໍຕາມ, ການປະຕິບັດບົດບັນຍັດການປົກຄອງນີ້ຫຼັກໆແລ້ວແມ່ນເລີ່ມຕົ້ນຈາກຕອນນີ້), ແຕ່ມື້ນີ້ ເຮົາໄດ້ເປີດເຜີຍມັນອອກທັງໝົດໃຫ້ແກ່ພວກເຈົ້າ ເພື່ອໃຫ້ພວກເຈົ້າຫຼີກເວັ້ນທີ່ຈະເຮັດຜິດ.

ທຸກຄົນຄວນໄດ້ຍິນສຽງຂອງເຮົາ ແລະ ເຊື່ອໃນພຣະທຳຂອງເຮົາ. ບໍ່ດັ່ງນັ້ນ ເຮົາຈະບໍ່ກະທຳ ຫຼື ເຮົາຈະບໍ່ປະຕິບັດພາລະກິດໃດໆ. ພຣະທຳ ແລະ ການກະທຳທຸກຢ່າງຂອງເຮົາແມ່ນຕົວຢ່າງທີ່ພວກເຈົ້າຄວນປະຕິບັດຕາມ; ພວກມັນແມ່ນແບບຢ່າງຂອງພວກເຈົ້າ ແລະ ພວກມັນເປັນຕົ້ນແບບໃຫ້ພວກເຈົ້າໄດ້ປະຕິບັດຕາມ. ເຫດຜົນທີ່ເປັນຫຍັງເຮົາຈຶ່ງກາຍມາເປັນເນື້ອໜັງກໍເພື່ອໃຫ້ພວກເຈົ້າໄດ້ເຫັນສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີໃນຄວາມເປັນມະນຸດຂອງເຮົາ. ໃນອະນາຄົດ ເຮົາຈະເຮັດໃຫ້ພວກເຈົ້າເປັນພະຍານເຖິງສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີໃນຄວາມເປັນພຣະເຈົ້າຂອງເຮົາ. ສິ່ງຕ່າງໆຕ້ອງດຳເນີນ

ການເທື່ອລະບາດກ້າວໃນລັກສະນະນີ້. ບໍ່ດັ່ງນັ້ນ ຜູ້ຄົນຈະບໍ່ສາມາດເຊື່ອໄດ້ແທ້ໆ ແລະ ພວກເຂົາຈະບໍ່ມີຄວາມຮູ້ກ່ຽວກັບເຮົາ. ກົງກັນຂ້າມ ພວກເຂົາຈະສາມາດມີພຽງນິມິດທີ່ບໍ່ຊັດເຈນ ແລະ ຄຸມເຄືອ ແລະ ພວກເຂົາຈະບໍ່ສາມາດມີຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບເຮົາ. ພຣະທຳຂອງເຮົາໄດ້ສະແດງວ່າ ຕົວຕົນຂອງເຮົາໄດ້ປາກົດຕໍ່ພວກເຈົ້າຢ່າງສົມບູນ ແຕ່ຜູ້ຄົນໄດ້ຍິນພຣະທຳຂອງເຮົາ ແລະ ຍັງບໍ່ຮູ້ຈັກເຮົາ, ຍ້ອນເຫດຜົນດຽວກໍຄືພວກເຂົາໂງ່ຈ້າ ແລະ ບໍ່ມີຄວາມຮູ້. ແມ່ນແຕ່ໃນຕອນນີ້ທີ່ເຮົາໄດ້ກາຍມາເປັນເນື້ອໜັງ, ຜູ້ຄົນຍັງທ້າທາຍເຮົາ ເພາະສະນັ້ນ ເຮົາຈຶ່ງນຳໃຊ້ຄວາມໂກດຮ້າຍຂອງເຮົາ ແລະ ບິດບັນຍັດການປົກຄອງຂອງເຮົາເພື່ອລົງໂທດຍຸກເດີມທີ່ຊົ່ວຮ້າຍ ແລະ ສັບສົນປົນເປນີ້ ແລະ ເພື່ອເຮັດໃຫ້ຊາຕານ ແລະ ມານຮ້າຍອັບອາຍຢ່າງທີ່ສຸດ. ນີ້ແມ່ນວິທີດຽວ; ມັນຄືຈຸດໝາຍປາຍທາງສຳລັບມະນຸດຊາດ ແລະ ມັນຄືຈຸດຈົບທີ່ລໍຖ້າມະນຸດຊາດ. ຜົນຕາມມາແມ່ນບົດສະຫຼຸບທີ່ຮັບຮູ້ກ່ອນໜ້າແລ້ວ ເຊິ່ງບໍ່ມີຜູ້ໃດສາມາດປ່ຽນແປງ ຫຼື ຫຼີກເວັ້ນໄດ້. ເຮົາຜູ້ດຽວເທົ່ານັ້ນທີ່ມີສິດເດັດຂາດ; ນີ້ແມ່ນການຄຸ້ມຄອງຂອງເຮົາ ແລະ ນີ້ແມ່ນແຜນການຂອງເຮົາ. ທຸກຄົນຕ້ອງເຊື່ອ ແລະ ເຊື່ອໝັ້ນດ້ວຍໃຈ ແລະ ດ້ວຍຄຳເວົ້າ. ຄົນທີ່ໄດ້ຮັບໂຊກຊະຕາທີ່ດີໃນຊີວິດນີ້ຈະທົນທຸກຊົ່ວນິດນິລັນຢ່າງແນ່ນອນ, ໃນຂະນະທີ່ຄົນທີ່ທົນທຸກໃນຊີວິດນີ້ຈະໄດ້ຮັບພອນຊົ່ວນິດນິລັນຢ່າງແນ່ນອນ ນັ້ນກໍຄື ເຮົາໄດ້ກຳນົດສິ່ງນີ້ໄວ້ລ່ວງໜ້າ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ບໍ່ມີຜູ້ໃດສາມາດປ່ຽນໃຈເຮົາໄດ້ ແລະ ບໍ່ມີຜູ້ໃດສາມາດເພີ່ມແມ່ນແຕ່ຄຳດຽວໃສ່ພຣະທຳຂອງເຮົາອີກ ແລະ ແຮງໄກທີ່ພວກເຂົາຈະໄດ້ຮັບອະນຸຍາດໃຫ້ເອົາພຣະທຳແມ່ນແຕ່ຂໍ້ດຽວອອກຕາມອຳເພີໃຈ; ຖ້າມີຜູ້ໃດລະເມີດສິ່ງນີ້, ເຮົາຈະຂ້ຽນຕີພວກເຂົາຢ່າງແນ່ນອນ.

ຄວາມລຶກລັບຂອງເຮົາຖືກເປີດເຜີຍໃຫ້ແກ່ພວກເຈົ້າໃນແຕ່ລະມື້, ພວກເຈົ້າເຂົ້າໃຈພວກມັນແທ້ໆບໍ? ພວກເຈົ້າໝັ້ນໃຈກ່ຽວກັບພວກມັນແທ້ໆບໍ? ເມື່ອຊາຕານກຳລັງລໍ້ລວງເຈົ້າ, ເຈົ້າສາມາດເບິ່ງທະລຸມັນໄດ້ບໍ? ສິ່ງນີ້ແມ່ນຖືກກຳນົດຕາມວຸດທິພາວະຂອງພວກເຈົ້າໃນຊີວິດ. ຍ້ອນເຮົາເວົ້າວ່າທຸກສິ່ງຖືກເຮົາກຳນົດໄວ້ລ່ວງໜ້າ, ແລ້ວເປັນຫຍັງເຮົາຈຶ່ງບັງເກີດເປັນມະນຸດດ້ວຍຕົນເອງເພື່ອເຮັດໃຫ້ລູກຊາຍຂອງເຮົາສົມບູນ? ຍິ່ງໄປກວ່ານັ້ນ ເປັນຫຍັງເຮົາຈຶ່ງປະຕິບັດພາລະກິດຫຼາຍຢ່າງທີ່ຜູ້ຄົນຄິດວ່າໄຮ້ປະໂຫຍດ? ແມ່ນເຮົາບໍທີ່ສັບສົນ? ໃຫ້ຈື່ສິ່ງນີ້ໄວ້! ທຸກສິ່ງທີ່ເຮົາເຮັດໄດ້ເກີດຂຶ້ນບໍ່ແມ່ນເພື່ອຮັບເອົາລູກຊາຍກົກຂອງເຮົາເທົ່ານັ້ນ ແຕ່ທີ່ສຳຄັນໄປກວ່ານັ້ນກໍຄືເພື່ອເຮັດໃຫ້ຊາຕານອັບອາຍ. ເຖິງແມ່ນຊາຕານທ້າທາຍເຮົາ ແຕ່ເຮົາກໍມີລິດອຳນາດທີ່ຈະເຮັດໃຫ້ລູກຫຼານຂອງມັນກະບົດຕໍ່ມັນ ແລະ ຫັນມາສັນລະເສີນເຮົາ. ຍິ່ງໄປກວ່ານັ້ນ ທຸກສິ່ງທີ່ເຮົາເຮັດແມ່ນເພື່ອໃຫ້ບາດກ້າວຕໍ່ໄປຂອງພາລະກິດດຳເນີນໄປຢ່າງລາບລື່ນ ແລະ ໃຫ້ໂລກທັງປວງໄດ້ຮ້ອງໂຮ ແລະ ສັນລະເສີນເຮົາ ແລະ ທຸກສິ່ງທີ່ຫາຍໃຈກໍຈະຄຸເຂົ່າລົງໃຫ້ເຮົາ ແລະ ຖວາຍສະຫງ່າລາສີໃຫ້ແກ່ເຮົາ; ມື້ນັ້ນຈະເປັນມື້ແຫ່ງສະຫງ່າລາສີຢ່າງແທ້ຈິງ. ເຮົາຖືທຸກສິ່ງໃນມືຂອງເຮົາ ແລະ ເມື່ອສຽງຝ້າຮ້ອງທັງເຈັດດັງຂຶ້ນ, ທຸກສິ່ງຈະຖືກເຮັດໃຫ້ສຳເລັດຢ່າງຄົບຖ້ວນ, ບໍ່ປ່ຽນແປງຈັກເທື່ອ, ທຸກສິ່ງໄດ້ຖືກກຳນົດໄວ້ແລ້ວ. ນັບຕັ້ງແຕ່ຈຸດນັ້ນເປັນຕົ້ນມາ ແມ່ນຈະໄດ້ເຂົ້າສູ່ຊີວິດໃໝ່ໃນສະຫວັນໃໝ່ ແລະ ເທິງແຜ່ນດິນໂລກໃໝ່, ຈະເຂົ້າສູ່ສະພາບການໃໝ່ທັງສິ້ນ

ແລະ ຊີວິດໃໝ່ແຫ່ງອານາຈັກກໍຈະເລີ່ມຕົ້ນຂຶ້ນ. ແຕ່ພາຍໃນອານາຈັກເປັນແນວໃດ? ຜູ້ຄົນບໍ່ສາມາດຮັບຮູ້ມັນໄດ້ຢ່າງຊັດເຈນແທ້ໆ (ເພາະບໍ່ມີຜູ້ໃດເຄີຍຊີມລົດຊາດຂອງຊີວິດໃນອານາຈັກມາກ່ອນ ແລະ ດ້ວຍເຫດນັ້ນ ມັນຈຶ່ງເປັນພຽງການຈິນຕະນາການໃນຄວາມຄິດຂອງຜູ້ຄົນ ແລະ ການຄຸ່ນຄິດໃນຫົວໃຈຂອງພວກເຂົາ). ໃນການຫັນປ່ຽນຈາກຊີວິດໃນຄຣິສຕະຈັກໃຫ້ກາຍເປັນຊີວິດແຫ່ງອານາຈັກເຊິ່ງກຳລັງຫັນປ່ຽນຈາກສະພາບປັດຈຸບັນໃຫ້ກາຍເປັນສະພາບໃນອະນາຄົດ, ຫຼາຍສິ່ງຈະເກີດຂຶ້ນໃນລະຫວ່າງເວລານີ້ ເຊິ່ງຜູ້ຄົນບໍ່ເຄີຍຈິນຕະນາການມາກ່ອນ. ຊີວິດໃນຄຣິສຕະຈັກແມ່ນສິ່ງທີ່ມາກ່ອນການເຂົ້າສູ່ຊີວິດແຫ່ງອານາຈັກ, ສະນັ້ນ ກ່ອນທີ່ຊີວິດແຫ່ງອານາຈັກຈະເກີດຂຶ້ນ, ເຮົາຈະພະຍາຍາມຢ່າງສຸດຄວາມສາມາດເພື່ອສິ່ງເສີມຊີວິດໃນຄຣິສຕະຈັກ. ຊີວິດໃນຄຣິສຕະຈັກແມ່ນຫຍັງ? ມັນເປັນແບບນີ້: ທຸກຄົນ ເຊິ່ງລວມເຖິງລູກຊາຍກົກຂອງເຮົາ ກິນ, ດື່ມ ແລະ ໄດ້ຮັບພຣະທຳຂອງເຮົາ ແລະ ຮູ້ຈັກເຮົາ ແລ້ວກໍໄດ້ຮັບການເຜົາໄໝ້ ແລະ ການຊຳລະລ້າງໃຫ້ບໍລິສຸດຂອງເຮົາ ເພື່ອວ່າພວກເຂົາອາດເຂົ້າໃຈບົດບັນຍັດການປົກຄອງຂອງເຮົາ, ການພິພາກສາຂອງເຮົາ ແລະ ຄວາມໂກດຮ້າຍຂອງເຮົາ ແລະ ຫຼີກເວັ້ນທີ່ຈະເຮັດຜິດໃນຊີວິດແຫ່ງອານາຈັກ. ແລ້ວ "ຊີວິດແຫ່ງອານາຈັກ" ແມ່ນຫຍັງ? ຊີວິດແຫ່ງອານາຈັກແມ່ນບ່ອນທີ່ລູກຊາຍກົກຂອງເຮົາປົກຄອງເປັນກະສັດຮ່ວມກັນກັບເຮົາ, ປົກຄອງເໜືອທຸກຄົນ ແລະ ທຸກຊົນຊາດ (ມີພຽງແຕ່ລູກຊາຍກົກຂອງເຮົາ ແລະ ເຮົາເທົ່ານັ້ນທີ່ສາມາດຊື່ນຊົມຊີວິດແຫ່ງອານາຈັກ). ເຖິງແມ່ນລູກຊາຍກົກຂອງເຮົາ ແລະ ປະຊາຊົນຂອງເຮົາມາຈາກທຸກຊົນຊາດ ແລະ ທຸກຄົນໄດ້ເຂົ້າສູ່ອານາຈັກ, ພວກເຂົາກໍບໍ່ສາມາດຊື່ນຊົມຊີວິດແຫ່ງອານາຈັກໄດ້. ມີພຽງແຕ່ຄົນທີ່ເຂົ້າສູ່ໂລກຝ່າຍວິນຍານເທົ່ານັ້ນຈຶ່ງສາມາດຊື່ນຊົມຊີວິດແຫ່ງອານາຈັກໄດ້. ສະນັ້ນ ມີພຽງແຕ່ລູກຊາຍກົກຂອງເຮົາ ແລະ ເຮົາເທົ່ານັ້ນທີ່ສາມາດດຳລົງຊີວິດໃນຮ່າງກາຍ, ໃນຂະນະທີ່ລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາຍັງມີຊີວິດຢູ່ໃນເນື້ອໜັງ. (ແຕ່ນີ້ກໍບໍ່ແມ່ນເນື້ອໜັງທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ. ນີ້ແມ່ນຄວາມໝາຍຂອງການທີ່ລູກຊາຍກົກຂອງເຮົາປົກຄອງຮ່ວມກັນກັບເຮົາດັ່ງກະສັດ). ຄົນສ່ວນທີ່ເຫຼືອທັງໝົດແມ່ນຈະຖືກຮັບເອົາຈິດໃຈ, ວິນຍານ ແລະ ຮ່າງກາຍຂອງພວກເຂົາ ແລະ ໂຍນລົງສູ່ດິນແດນມໍລະນາ. ນັ້ນໝາຍຄວາມວ່າ ຜູ້ຄົນເຫຼົ່ານີ້ຈະພິນາດຢ່າງສິ້ນເຊີງ ແລະ ຈະເຊົາມີຊີວິດຢູ່ (ແຕ່ພວກເຂົາຕ້ອງຜ່ານພັນທະນາການ ແລະ ຄວາມໂຫດຮ້າຍທັງໝົດຂອງຊາຕານ ເຊັ່ນ: ຄວາມລຳບາກ ແລະ ໄພພິບັດ). ຫຼັງຈາກທີ່ໄດ້ເຮັດສິ່ງນີ້ແລ້ວ, ຊີວິດແຫ່ງອານາຈັກຈະດຳເນີນຕາມເສັ້ນທາງຢ່າງເປັນທາງການ ແລະ ເຮົາຈະເລີ່ມເປີດເຜີຍເຖິງການກະທຳຂອງເຮົາຢ່າງເປັນທາງການ (ເພື່ອໃຫ້ເປີດເຜີຍສູ່ສາທາລະນະ ແລະ ບໍ່ລີ້ລັບ). ແຕ່ນັ້ນມາ, ຈະບໍ່ມີການຖອນຫາຍໃຈ ແລະ ບໍ່ມີນໍ້າຕາອີກຕໍ່ໄປຢ່າງແນ່ນອນ. (ຍ້ອນຈະບໍ່ມີສິ່ງໃດອີກທີ່ສາມາດທຳຮ້າຍຜູ້ຄົນ ຫຼື ເຮັດໃຫ້ພວກເຂົາຮ້ອງໄຫ້ ຫຼື ເຮັດໃຫ້ພວກເຂົາທົນທຸກ ແລະ ສິ່ງນີ້ກໍເກີດຂຶ້ນກັບລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາເຊັ່ນກັນ; ແຕ່ມີໜຶ່ງຈຸດທີ່ຕ້ອງໄດ້ຮັບການເນັ້ນຢໍ້າ ເຊິ່ງກໍຄື ລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາຈະເປັນເນື້ອໜັງຕະຫຼອດໄປ). ທຸກຄົນຈະດີອົກດີໃຈ ນັ້ນກໍຄື ນິມິດແຫ່ງຄວາມປິຕິຍິນດີ. ມັນຈະບໍ່ເປັນສິ່ງທີ່ສາມາດຈັບຕ້ອງໄດ້, ແຕ່ກົງກັນຂ້າມ ມັນຈະເປັນສິ່ງທີ່ບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ. ຄົນທີ່ເປັນລູກຊາຍກົກ

ຂອງເຮົາຈະສາມາດໄດ້ຮັບມັນເຊັ່ນກັນ; ນີ້ຄືການກະທຳທີ່ອັດສະຈັນຂອງເຮົາ ແລະ ນີ້ຄືລິດອຳນາດທີ່ຍິ່ງໃຫຍ່ຂອງເຮົາ.

ເຮົາປາຖະໜາໃຫ້ພວກເຈົ້າສາມາດສະແຫວງຫາຄວາມປະສົງຂອງເຮົາ ແລະ ຄຳນຶງເຖິງຫົວໃຈຂອງເຮົາຕະຫຼອດເວລາ. ຄວາມສຸກຊົ່ວຄາວສາມາດທຳລາຍຊີວິດທັງໝົດຂອງເຈົ້າ ໃນຂະນະທີ່ການທົນທຸກຊົ່ວຄາວສາມາດເຮັດໃຫ້ໄດ້ຮັບພອນຕະຫຼອດໄປເປັນນິດ. ບໍ່ໃຫ້ເສົ້າໃຈ; ນີ້ແມ່ນເສັ້ນທາງທີ່ຕ້ອງຍ່າງຕາມ. ເຮົາໄດ້ເວົ້າຢູ່ເລື້ອຍໆກ່ອນໜ້ານີ້ວ່າ: "ສຳລັບຄົນທີ່ເສຍສະຫຼະເພື່ອເຮົາຢ່າງຈິງໃຈ, ເຮົາຈະອວຍພອນເຈົ້າຢ່າງຫຼວງຫຼາຍແນ່ນອນ". ແລ້ວ "ພອນ" ແມ່ນຫຍັງ? ພວກມັນບໍ່ແມ່ນພຽງສິ່ງທີ່ໄດ້ຮັບໃນມື້ນີ້, ແຕ່ຍິ່ງໄປກວ່ານັ້ນ ພວກມັນແມ່ນສິ່ງທີ່ຈະໄດ້ຮັບໃນອະນາຄົດ ນັ້ນກໍຄື ມີພຽງແຕ່ສິ່ງເຫຼົ່ານີ້ເທົ່ານັ້ນທີ່ເປັນພອນແທ້ຈິງ. ເມື່ອພວກເຈົ້າກັບຄືນສູ່ພູຊີໂອນ, ພວກເຈົ້າຈະສະແດງຄວາມຮູ້ສຶກຂອບໃຈທີ່ບໍ່ສິ້ນສຸດສຳລັບການທົນທຸກໃນປັດຈຸບັນຂອງພວກເຈົ້າ ຍ້ອນນີ້ແມ່ນພອນຂອງເຮົາ. ການດຳລົງຊີວິດໃນເນື້ອໜັງໃນຕອນນີ້ຄືການຢູ່ເທິງພູຊີໂອນ (ໝາຍຄວາມວ່າ ເຈົ້າດຳລົງຊີວິດພາຍໃນເຮົາ), ໃນຂະນະທີ່ການດຳລົງຊີວິດໃນເນື້ອໜັງໃນມື້ອື່ນຈະເປັນມື້ແຫ່ງສະຫງ່າລາສີ ແລະ ຍິ່ງໄປກວ່ານັ້ນ ນີ້ກໍຄືການຢູ່ເທິງພູຊີໂອນ. ຫຼັງຈາກທີ່ໄດ້ຍິນພຣະທຳເຫຼົ່ານີ້ທີ່ເຮົາໄດ້ເວົ້າ, ພວກເຈົ້າກໍເຂົ້າໃຈວ່າ "ພູຊີໂອນ" ໝາຍເຖິງຫຍັງ. ພູຊີໂອນແມ່ນຄຳພ້ອງຄວາມໝາຍສຳລັບອານາຈັກ ແລະ ມັນຍັງເປັນໂລກຝ່າຍວິນຍານ. ເທິງພູຊີໂອນໃນມື້ນີ້, ເຈົ້າຢູ່ໃນເນື້ອໜັງ ໂດຍໄດ້ຮັບການປອບໃຈ ແລະ ໄດ້ຮັບຄວາມກະລຸນາຂອງເຮົາ; ເທິງພູຊີໂອນໃນອະນາຄົດ, ເຈົ້າຈະຢູ່ໃນຮ່າງກາຍ ໂດຍໄດ້ຮັບພອນເພື່ອປົກຄອງດັ່ງກະສັດ. ໂດຍແທ້ຈິງແລ້ວ ສິ່ງນີ້ຕ້ອງບໍ່ຖືກເມີນເສີຍ. ແລ້ວບໍ່ມີທາງທີ່ຈະອະນຸຍາດໃຫ້ເວລາທີ່ສາມາດໄດ້ຮັບພອນຜ່ານໄປແບບງຽບໆ; ໃນທີ່ສຸດແລ້ວ ມື້ນີ້ກໍຄືມື້ນີ້ ແລະ ມັນແຕກຕ່າງຫຼາຍຈາກມື້ອື່ນ. ເມື່ອເຈົ້າມາຮັບພອນ, ເຈົ້າຈະຄິດວ່າ ຄວາມກະລຸນາໃນມື້ນີ້ບໍ່ມີຄ່າໃຫ້ກ່າວເຖິງເລີຍ. ນີ້ແມ່ນສິ່ງທີ່ເຮົາຝາກຝັງໃຫ້ແກ່ເຈົ້າ ແລະ ນີ້ແມ່ນຄຳແນະນຳສຸດທ້າຍຂອງເຮົາ.

# ບົດທີ 98

ທຸກສິ່ງຈະເກີດຂຶ້ນກັບພວກເຈົ້າທຸກຄົນ ແລະ ພວກມັນຈະເຮັດໃຫ້ພວກເຈົ້າຮູ້ກ່ຽວກັບເຮົາຫຼາຍຂຶ້ນ ແລະ ແນ່ໃຈກ່ຽວກັບເຮົາຫຼາຍຂຶ້ນ. ພວກມັນຈະເຮັດໃຫ້ເຈົ້າຮູ້ຈັກເຮົາຜູ້ທີ່ເປັນພຣະເຈົ້າອົງດຽວ, ຮູ້ຈັກເຮົາ ອົງຊົງລິດທານຸພາບສູງສຸດ, ຮູ້ຈັກເຮົາພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດ. ຫຼັງຈາກນັ້ນ, ເຮົາຈະອອກມາຈາກເນື້ອໜັງ, ກັບຄືນສູ່ຊີໂອນ, ສູ່ດິນແດນທີ່ດີຂອງການາອານ ເຊິ່ງເປັນບ່ອນພັກເຊົາຂອງເຮົາ ແລະ ຈຸດໝາຍປາຍທາງຂອງເຮົາ, ຖານທີ່ເຮົາສ້າງທຸກສິ່ງ. ຕອນນີ້, ບໍ່ມີໃຜໃນພວກເຈົ້າເຂົ້າໃຈຄວາມໝາຍຂອງພຣະທຳທີ່ເຮົາກຳລັງກ່າວ; ບໍ່ມີແມ່ນແຕ່ຄົນດຽວທີ່ສາມາດເຂົ້າໃຈຄວາມໝາຍຂອງພຣະທຳເຫຼົ່ານີ້. ມີແຕ່ເມື່ອທຸກສິ່ງຖືກເປີດເຜີຍໃຫ້ແກ່ພວກເຈົ້າເທົ່ານັ້ນ ພວກເຈົ້າຈຶ່ງຈະເຂົ້າໃຈວ່າເປັນຫຍັງເຮົາຈຶ່ງກ່າວພຣະທຳເຫຼົ່ານີ້. ເຮົາບໍ່ໄດ້ເປັນຂອງໂລກ, ແຮງແລ້ວທີ່ເຮົາຈະເປັນຂອງຈັກກະວານ, ຍ້ອນວ່າເຮົາແມ່ນພຣະເຈົ້າອົງດຽວ. ເຮົາຖືໂລກຈັກກະວານທັງໝົດໄວ້ໃນມືຂອງເຮົາ, ເຮົາຮັບຜິດຊອບມັນດ້ວຍຕົວເຮົາເອງ ແລະ ຄົນພຽງແຕ່ສາມາດຍອມຕໍ່ອຳນາດອະທິປະໄຕຂອງເຮົາເທົ່ານັ້ນ, ກ່າວນາມອັນບໍລິສຸດຂອງເຮົາ, ເຊີດຊູເຮົາ ແລະ ສັນລະເສີນເຮົາ. ທຸກສິ່ງຈະຄ່ອຍໆຖືກເປີດເຜີຍແກ່ພວກເຈົ້າ. ເຖິງແມ່ນວ່າບໍ່ມີຫຍັງຖືກປິດບັງໄວ້, ພວກເຈົ້າກໍຍັງບໍ່ສາມາດເຂົ້າໃຈວິທີການເວົ້າຂອງເຮົາ ຫຼື ນໍ້າສຽງແຫ່ງພຣະທຳຂອງເຮົາໄດ້. ເຈົ້າຍັງບໍ່ເຂົ້າໃຈວ່າ ແຜນການຄຸ້ມຄອງຂອງເຮົານັ້ນແມ່ນລ້ວນແລ້ວແຕ່ກ່ຽວກັບຫຍັງ. ດັ່ງນັ້ນ, ເຮົາຈະບອກເຈົ້າພາຍຫຼັງກ່ຽວກັບທຸກສິ່ງທີ່ເຈົ້າບໍ່ເຂົ້າໃຈໃນສິ່ງທີ່ເຮົາໄດ້ກ່າວຍ້ອນວ່າ ສຳລັບເຮົາແລ້ວ ທຸກສິ່ງລຽບງ່າຍ ແລະ ຊັດເຈນ, ໃນຂະນະທີ່ສຳລັບເຈົ້າ ມັນຍາກສຸດໆ ແລະເຈົ້າພຽງແຕ່ບໍ່ເຂົ້າໃຈມັນແມ່ນແຕ່ໜ້ອຍເລີຍ. ດ້ວຍເຫດນີ້, ເຮົາຈະປ່ຽນວິທີການເວົ້າຂອງເຮົາ ແລະເມື່ອເຮົາກ່າວ ເຮົາຈະບໍ່ເຊື່ອມໂຍງສິ່ງຕ່າງໆເຂົ້າດ້ວຍກັນ, ແຕ່ຈະຊີ້ແຈງແຕ່ລະຈຸດເທື່ອລະອັນ.

ການກັບເປັນຄືນມາຈາກຄວາມຕາຍໝາຍຄວາມວ່າແນວໃດ? ມັນໝາຍເຖິງການຕາຍໃນເນື້ອໜັງ ແລະ ຕໍ່ມາກໍກັບຄືນສູ່ຮ່າງກາຍຫຼັງຈາກຄວາມຕາຍບໍ? ນີ້ແມ່ນສິ່ງທີ່ການເປັນຄືນມາຈາກຄວາມຕາຍໝາຍເຖິງບໍ? ມັນງ່າຍປານນັ້ນບໍ? ເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ; ເຈົ້າຮູ້ຫຍັງກ່ຽວກັບເລື່ອງນີ້? ເຈົ້າເຂົ້າໃຈແນວໃດກ່ຽວກັບເລື່ອງນີ້? ການເປັນຄືນມາຈາກຄວາມຕາຍຂອງເຮົາໃນລະຫວ່າງການບັງເກີດເປັນມະນຸດຄັ້ງທຳອິດຂອງເຮົາສາມາດຖືກປະຕິບັດຕາມຕົວອັກສອນຢ່າງແທ້ຈິງບໍ? ຂະບວນການແມ່ນດັ່ງທີ່ໄດ້ບັນລະຍາຍໃນຂໍ້ຄວາມເຫຼົ່ານັ້ນແທ້ໆບໍ? ເຮົາໄດ້ກ່າວວ່າຖ້າເຮົາບໍ່ເວົ້າຢ່າງກົງໄປກົງມາ ແລະ ຖ້າເຮົາບໍ່ບອກຄົນຢ່າງຊັດເຈນ, ແລ້ວກໍຈະບໍ່ມີໃຜສາມາດເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາໄດ້. ຕະຫຼອດຍຸກຕ່າງໆ ບໍ່ມີຄົນໃດທີ່ບໍ່ຄິດວ່າການເປັນຄືນມາຈາກຄວາມຕາຍເປັນເຊັ່ນນັ້ນ. ນັບຕັ້ງແຕ່ເວລາຂອງການສ້າງໂລກ, ບໍ່ມີໃຜທີ່ໄດ້ເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງສິ່ງນີ້. ເຮົາໄດ້ຖືກຕອກຕະປູຄຶງໃສ່ໄມ້ກາງແຂນແທ້ບໍ? ແລ້ວຫຼັງຈາກຄວາມຕາຍ, ເຮົາໄດ້ອອກມາຈາກຂຸມຝັງສົບບໍ? ມັນເກີດຂຶ້ນແບບນີ້ແທ້ໆບໍ? ເລື່ອງນີ້ເປັນຈິງໄດ້ແທ້ໆບໍ? ຕະຫຼອດຍຸກຕ່າງໆ, ບໍ່ມີໃຜໃຊ້ພະຍາຍາມໃນເລື່ອງນີ້, ບໍ່ມີໃຜໄດ້ຮູ້ຈັກເຮົາຈາກເລື່ອງນີ້ ແລະ ບໍ່ມີໃຜຈັກຄົນທີ່ບໍ່ເຊື່ອເລື່ອງນີ້;

ທຸກຄົນຄິດວ່າມັນແມ່ນຄວາມຈິງ. ພວກເຂົາບໍ່ຮູ້ວ່າພຣະທຳທຸກໆຂໍ້ຂອງເຮົາມີຄວາມໝາຍພາຍໃນຢູ່. ແລ້ວການເປັນຄືນມາຈາກຄວາມຕາຍແມ່ນຫຍັງແທ້? (ໃນອະນາຄົດອັນໃກ້ນີ້, ພວກເຈົ້າຈະປະສົບກັບເລື່ອງນີ້, ດັ່ງນັ້ນເຮົາຈຶ່ງກຳລັງບອກພວກເຈົ້າກ່ຽວກັບມັນລ່ວງໜ້າ). ບໍ່ມີສິ່ງມີຊີວິດທີ່ຖືກສ້າງຂຶ້ນໃດທີ່ເຕັມໃຈຕາຍ; ພວກມັນທັງໝົດຢາກມີຊີວິດຢູ່. ຈາກທັດສະນະຂອງເຮົາ, ຄວາມຕາຍຂອງເນື້ອໜັງບໍ່ແມ່ນຄວາມຕາຍທີ່ແທ້ຈິງ. ເມື່ອພຣະວິນຍານຂອງເຮົາຖືກເອີ້ນຄືນຈາກຄົນໆໜຶ່ງ, ຄົນໆນັ້ນກໍຕາຍ. ເພາະສະນັ້ນ, ເຮົາເອີ້ນບັນດາມານຮ້າຍທັງໝົດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ (ບັນດາຜູ້ທີ່ບໍ່ມີຄວາມເຊື່ອ, ຜູ້ທີ່ບໍ່ເຊື່ອທັງໝົດ) ວ່າເປັນ ຄົນທີ່ຕາຍແລ້ວ. ນັບແຕ່ເວລາການສ້າງໂລກເປັນຕົ້ນມາ, ເຮົາໄດ້ມອບພຣະວິນຍານຂອງເຮົາໃຫ້ແກ່ທຸກຄົນທີ່ເຮົາໄດ້ເລືອກສັນໄວ້. ແນວໃດກໍ່ຕາມ, ຫຼັງຈາກໄລຍະໜຶ່ງຫຼັງຈາກເວລາແຫ່ງການສ້າງ, ຜູ້ຄົນກໍຖືກຄອບງຳໂດຍຊາຕານໃນຊົ່ວໄລຍະໜຶ່ງ. ດັ່ງນັ້ນເຮົາຈຶ່ງຈາກໄປ ແລະ ຜູ້ຄົນເລີ່ມທົນທຸກ (ຄວາມທຸກທົນທີ່ເຮົາໄດ້ຮັບເມື່ອເຮົາບັງເກີດເປັນມະນຸດ ແລະ ຖືກຄຶງໃສ່ໄມ້ກາງແຂນ ດັ່ງທີ່ໄດ້ຖືກກ່າວເຖິງ). ແນວໃດກໍຕາມ, ໃນເວລາທີ່ເຮົາໄດ້ຖືກກຳນົດໄວ້ລ່ວງໜ້າ (ເວລາເມື່ອການທີ່ເຮົາປະຖິ້ມຄົນໄດ້ສິ້ນສຸດລົງ), ເຮົາເອີ້ນຄືນຄົນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າແລ້ວ ແລະ ເຮົາຈະໃສ່ພຣະວິນຍານຂອງເຮົາໃນພວກເຈົ້າອີກຄັ້ງໜຶ່ງ ເພື່ອວ່າພວກເຈົ້າຈະໄດ້ກັບຄືນມາມີຊີວິດ. ນີ້ເອີ້ນວ່າ “ການເປັນຄືນມາຈາກຄວາມຕາຍ”. ໃນປັດຈຸບັນນີ້, ບັນດາຜູ້ທີ່ອາໄສຢູ່ໃນພຣະວິນຍານແທ້ໆ ລ້ວນແລ້ວແຕ່ເປັນເລີດ ແລະ ພວກເຂົາທັງໝົດອາໄສຢູ່ໃນຮ່າງກາຍ. ແນວໃດກໍຕາມ, ອີກບໍ່ດົນ, ພວກເຈົ້າຈະປະຖິ້ມຄວາມຄິດທັງໝົດຂອງພວກເຈົ້າ, ແນວຄວາມຄິດຂອງພວກເຈົ້າ ແລະ ຄວາມພົວພັນທາງໂລກທັງໝົດ. ແຕ່ມັນບໍ່ແມ່ນການຟື້ນຄືນມາກຄວາມຕາຍຫຼັງຈາກທີ່ທົນທຸກທໍລະມານແບບທີ່ຜູ້ຄົນຈິນຕະນາການ. ການທີ່ພວກເຈົ້າດຳລົງຊີວິດຢູ່ໃນປັດຈຸບັນນີ້ແມ່ນເງື່ອນໄຂລ່ວງໜ້າຂອງການດຳລົງຊີວິດໃນຮ່າງກາຍ; ມັນແມ່ນເສັ້ນທາງທີ່ຈຳເປັນເພື່ອເຂົ້າສູ່ໂລກຝ່າຍວິນຍານ. ການຂ້າມຜ່ານຄວາມເປັນມະນຸດທຳມະດາທີ່ເຮົາກ່າວເຖິງໝາຍເຖິງການບໍ່ມີຄອບຄົວ, ບໍ່ມີເມຍ, ບໍ່ມີລູກ ແລະ ບໍ່ມີຄວາມຕ້ອງການຂອງມະນຸດ. ມັນຄືການຕັ້ງໃຈດຳລົງຊີວິດຕາມຮູບລັກສະນະຂອງເຮົາເທົ່ານັ້ນ, ການຕັ້ງໃຈເຂົ້າຢູ່ໃນຕົວເຮົາເທົ່ານັ້ນ ແລະ ບໍ່ຄິດກ່ຽວກັບສິ່ງອື່ນໃດທີ່ຢູ່ນອກຕົວເຮົາ; ທຸກຫົນແຫ່ງທີ່ເຈົ້າໄປແມ່ນເຮືອນຂອງເຈົ້າ. ນີ້ແມ່ນການຂ້າມຜ່ານຂອງຄວາມເປັນມະນຸດທຳມະດາ. ພວກເຈົ້າເຂົ້າໃຈຜິດພຣະທຳເຫຼົ່ານີ້ຂອງເຮົາຢ່າງທີ່ສຸດ; ຄວາມເຂົ້າໃຈຂອງພວກເຈົ້ານັ້ນຕື້ນເກີນໄປ. ເຮົາຈະປາກົດຕົວຕໍ່ທຸກຊົນຊາດ ແລະ ທຸກຄົນແນວໃດແທ້? ໃນເນື້ອໜັງໃນມື້ນີ້ບໍ? ບໍ່! ເມື່ອຮອດເວລາ, ເຮົາຈະປາກົດຕົວໃນຮ່າງກາຍຂອງເຮົາໃນທຸກຊົນຊາດຂອງຈັກກະວານ. ເວລາເມື່ອຄົນຕ່າງຊາດຕ້ອງການໃຫ້ພວກເຈົ້າລ້ຽງດູພວກເຂົາຍັງບໍ່ທັນມາຮອດເທື່ອ. ໃນເວລານັ້ນ ພວກເຈົ້າຈະຕ້ອງອອກມາຈາກເນື້ອໜັງ ແລະ ເຂົ້າສູ່ຮ່າງກາຍເພື່ອລ້ຽງດູພວກເຂົາ. ນີ້ແມ່ນຄວາມຈິງ, ແຕ່ມັນບໍ່ແມ່ນ “ການເປັນຄືນມາຈາກຄວາມຕາຍ” ທີ່ຄົນຈິນຕະນາການ. ໃນເວລາທີ່ກຳນົດໄວ້, ພວກເຈົ້າຈະອອກຈາກເນື້ອໜັງໂດຍບໍ່ຮູ້ຕົວ ແລະ ເຂົ້າສູ່ໂລກຝ່າຍວິນຍານ ແລະ ປົກຄອງທຸກຊົນຊາດຮ່ວມກັບເຮົາ. ມັນຍັງບໍ່ຮອດເວລາເທື່ອ. ເມື່ອເຮົາຕ້ອງການໃຫ້ພວກເຈົ້າຢູ່ໃນເນື້ອໜັງ, ພວກເຈົ້າກໍຈະຢູ່ໃນເນື້ອໜັງ

(ອີງຕາມການຮຽກຮ້ອງຂອງພາລະກິດເຮົາ, ຕອນນີ້ ພວກເຈົ້າຕ້ອງມີຄວາມຄິດ ແລະ ຍັງຕ້ອງດຳລົງຊີວິດຢູ່ໃນເນື້ອໜັງ, ດັ່ງນັ້ນ ພວກເຈົ້າຄວນເຮັດສິ່ງທີ່ພວກເຈົ້າຕ້ອງເຮັດໃນເນື້ອໜັງຕາມຂັ້ນຕອນຂອງເຮົາອີກດ້ວຍ; ຢ່າຖ້າຢ່າງຂີ້ຄ້ານ ຍ້ອນວ່າສິ່ງນີ້ຈະເຮັດໃຫ້ຊັກຊ້າ). ເມື່ອເຮົາຕ້ອງການໃຫ້ພວກເຈົ້າເຮັດໜ້າທີ່ໃນຮ່າງກາຍດັ່ງຄົນລ້ຽງດູຄຣິສຕະຈັກ, ພວກເຈົ້າຈະອອກມາຈາກເນື້ອໜັງ, ໂຍນຖິ້ມຄວາມຄິດຂອງພວກເຈົ້າ ແລະ ເພິ່ງພາເຮົາເພື່ອມີຊີວິດຢູ່ຢ່າງສິ້ນເຊີງ. ຈົ່ງມີຄວາມສັດທາໃນລິດອຳນາດຂອງເຮົາ ແລະ ໃນສະຕິປັນຍາຂອງເຮົາ. ທຸກສິ່ງຈະຖືກປະຕິບັດໂດຍເຮົາເປັນການສ່ວນຕົວ. ພວກເຈົ້າພຽງແຕ່ຕ້ອງຖ້າ ແລະ ຊື່ນຊົມ. ພອນທັງໝົດຈະມາຫາພວກເຈົ້າ ແລະ ພວກເຈົ້າຈະໄດ້ຮັບການສະໜອງທີ່ໄຮ້ຂອບເຂດ ແລະ ບໍ່ມີທີ່ສິ້ນສຸດ. ເມື່ອວັນນັ້ນມາເຖິງ, ພວກເຈົ້າຈະເຂົ້າໃຈຫຼັກການຂອງວິທີທີ່ເຮົາກະທຳສິ່ງນີ້, ເຈົ້າຈະຮູ້ຈັກການກະທຳອັນໜ້າອັດສະຈັນຂອງເຮົາ ແລະ ເຈົ້າຈະເຂົ້າໃຈວິທີທີ່ເຮົານຳເອົາລູກຊາຍກົກຂອງເຮົາກັບຄືນສູ່ຊີໂອນ. ນີ້ບໍ່ໄດ້ຊັບຊ້ອນແບບທີ່ພວກເຈົ້າຈິນຕະນາການແທ້ໆ, ແຕ່ມັນກໍບໍ່ໄດ້ງ່າຍແບບທີ່ພວກເຈົ້າຄິດເຊັ່ນກັນ.

ເຮົາຮູ້ວ່າເມື່ອເຮົາເວົ້າເລື່ອງນີ້ ພວກເຈົ້າແຮງບໍ່ສາມາດເຂົ້າໃຈວັດຖຸປະສົງທີ່ຢູ່ເບື້ອງຫຼັງພຣະທຳຂອງເຮົາ ແລະ ແຮງສັບສົນຫຼາຍຂຶ້ນຊ້ຳ. ເຈົ້າຈະປະສົມພວກມັນເຂົ້າກັນກັບສິ່ງທີ່ເຮົາໄດ້ກ່າວກ່ອນໜ້ານີ້ ເພາະສະນັ້ນ ເຈົ້າຈຶ່ງບໍ່ສາມາດເຂົ້າໃຈຫຍັງເລີຍ ແລະ ມັນຈະເບິ່ງຄືວ່າບໍ່ມີທາງອອກ. ແນວໃດກໍຕາມ, ບໍ່ຕ້ອງເປັນຫ່ວງ. ເຮົາຈະບອກພວກເຈົ້າທຸກຢ່າງ. ທຸກສິ່ງທີ່ເຮົາກ່າວມີຄວາມໝາຍ. ເຮົາໄດ້ກ່າວວ່າເຮົາສາມາດເຮັດໃຫ້ສິ່ງທີ່ມີຢູ່ກັບຄືນໄປສູ່ຄວາມວ່າງເປົ່າ ແລະ ສາມາດເຮັດໃຫ້ສິ່ງຕ່າງໆເພີ່ມທະວີຂຶ້ນຈາກຄວາມວ່າງເປົ່າ. ໃນຈິນຕະນາການຂອງມະນຸດ, ເພື່ອເຂົ້າສູ່ຮ່າງກາຍຈາກເນື້ອໜັງ, ຄົນໆໜຶ່ງຕ້ອງເປັນຄືນມາຈາກຄວາມຕາຍ. ໃນອະດີດ, ເຮົາໃຊ້ວິທີນີ້ ແລະ ສະແດງສິ່ງອັດສະຈັນທີ່ຍິ່ງໃຫຍ່ທີ່ສຸດຂອງເຮົາ, ແຕ່ປັດຈຸບັນນີ້ບໍ່ຄືອະດີດ. ເຮົາຈະນຳພວກເຈົ້າຈາກເນື້ອໜັງໃຫ້ເຂົ້າສູ່ຮ່າງກາຍໂດຍກົງ. ນີ້ບໍ່ແມ່ນສັນຍານ ແລະ ສິ່ງອັດສະຈັນທີ່ຍິ່ງໃຫຍ່ກວ່າບໍ? ນີ້ບໍ່ແມ່ນການສະແດງອອກຫຼາຍຂຶ້ນກ່ຽວກັບອຳນາດອັນໄພສານຂອງເຮົາບໍ? ເຮົາມີແຜນຂອງເຮົາ ແລະ ເຮົາມີເຈດຕະນາຂອງເຮົາ. ໃຜບໍ່ໄດ້ຢູ່ໃນມືຂອງເຮົາ? ເຮົາຮູ້ຈັກພາລະກິດທີ່ເຮົາປະຕິບັດ. ວິທີການປະຕິບັດພາລະກິດຂອງເຮົາໃນມື້ນີ້ແມ່ນແຕກຕ່າງຈາກອະດີດທັງໝົດ. ເຮົາປັບປ່ຽນວິທີການປະຕິບັດພາລະກິດຂອງເຮົາຕາມການປ່ຽນແປງຂອງຍຸກສະໄໝ. ເມື່ອເຮົາຖືກຄຶງໃສ່ໄມ້ກາງແຂນ, ນັ້ນແມ່ນຍຸກແຫ່ງພຣະຄຸນ, ແຕ່ຕອນນີ້ແມ່ນຍຸກສຸດທ້າຍ. ບາດກ້າວພາລະກິດຂອງເຮົາກຳລັງເລັ່ງໄວຂຶ້ນ; ມັນບໍ່ໄດ້ດຳເນີນໄປດ້ວຍຄວາມໄວດຽວກັນກັບທີ່ເຄີຍດຳເນີນໃນອະດີດ ແລະ ແຮງແລ້ວທີ່ມັນຈະຊ້າກວ່າໃນອະດີດ. ກົງກັນຂ້າມ, ມັນດຳເນີນການໄປໄວກວ່າໃນອະດີດຫຼາຍ. ບໍ່ມີວິທີທີ່ຈະອະທິບາຍມັນແທ້ໆ ແລະ ບໍ່ຈຳເປັນຕ້ອງມີຫຼາຍໆຂະບວນການທີ່ຊັບຊ້ອນ. ເຮົາມີອິດສະຫຼະທີ່ຈະເຮັດຫຍັງກໍໄດ້. ມັນບໍ່ແມ່ນຄວາມຈິງບໍວ່າມັນໃຊ້ພຽງແຕ່ພຣະທຳແຫ່ງສິດອຳນາດຄຳດຽວຈາກເຮົາເທົ່ານັ້ນເພື່ອກຳນົດວິທີທີ່ຄວາມປະສົງຂອງເຮົາຈະສຳເລັດລົງ ແລະ ວິທີທີ່ເຮົາຈະເຮັດໃຫ້ພວກເຈົ້າສົມບູນແບບ? ທຸກສິ່ງທີ່ເຮົາກ່າວຈະສຳເລັດລົງຢ່າງແນ່ນອນ. ໃນອະດີດ, ເຮົາກ່າວເລື້ອຍໆວ່າເຮົາຈະທົນທຸກ ແລະ ເຮົາບໍ່ໄດ້ອະນຸຍາດໃຫ້ຄົນເວົ້າເຖິງ

ຄວາມທຸກທໍລະມານທີ່ເຮົາໄດ້ທົນທຸກມາກ່ອນ; ການເວົ້າເຖິງເລື່ອງນີ້ແມ່ນການໝິ່ນປະໝາດເຮົາ. ນີ້ກໍຍ້ອນວ່າເຮົາແມ່ນພຣະເຈົ້າເອງ ແລະ ສຳລັບເຮົາບໍ່ມີຄວາມລຳບາກ; ເມື່ອເຈົ້າກ່າວເຖິງຄວາມທຸກທໍລະມານນີ້ ເຈົ້າກໍເຮັດໃຫ້ຄົນຮ້ອງໄຫ້. ເຮົາໄດ້ເວົ້າວ່າໃນອະນາຄົດຈະບໍ່ມີການຖອນຫາຍໃຈ ແລະ ນໍ້າຕາ. ສິ່ງນີ້ຄວນຖືກອະທິບາຍຈາກລັກສະນະນີ້ ແລະ ຫຼັງຈາກນັ້ນ ຄວາມໝາຍຂອງພຣະທຳຂອງເຮົາຈຶ່ງສາມາດຖືກເຂົ້າໃຈໄດ້. ຄວາມໝາຍຂອງ “ມະນຸດພຽງແຕ່ບໍ່ສາມາດທົນຕໍ່ຄວາມທຸກທໍລະມານນີ້” ແມ່ນເຮົາສາມາດແຍກອອກຈາກແນວຄວາມຄິດ ແລະ ຄວາມຄິດຂອງມະນຸດ, ແຍກອອກຈາກອາລົມຂອງເນື້ອໜັງ, ແຍກອອກຈາກທຸກຮ່ອງຮອຍຂອງການເປັນເນື້ອໜັງຂອງໂລກ ແລະ ຍ່າງອອກມາຈາກເນື້ອໜັງ ແລະ ວ່າເຮົາສາມາດຢືນຢູ່ໄດ້ເມື່ອທຸກຄົນກຳລັງໂຕ້ແຍ້ງເຮົາ. ສິ່ງນີ້ກໍພຽງພໍທີ່ຈະພິສູດວ່າເຮົາແມ່ນພຣະເຈົ້າອົງດຽວ. ເຮົາໄດ້ກ່າວວ່າ “ລູກຊາຍກົກທຸກຄົນຈະຕ້ອງເຂົ້າສູ່ໂລກຝ່າຍວິນຍານຈາກເນື້ອໜັງ; ນີ້ແມ່ນເສັ້ນທາງທີ່ພວກເຂົາຕ້ອງເດີນເພື່ອປົກຄອງຮ່ວມກັບເຮົາດັ່ງກະສັດ”. ຄວາມໝາຍຂອງປະໂຫຍກນີ້ແມ່ນ ເມື່ອເຈົ້າຜະເຊີນໜ້າກັບສິ່ງທີ່ພວກເຈົ້າໄດ້ຈິນຕະນາການໃນອະດີດ ເຈົ້າຈະອອກມາຈາກເນື້ອໜັງຢ່າງເປັນທາງການ ແລະ ຈະເຂົ້າສູ່ຮ່າງກາຍເພື່ອເລີ່ມພິພາກສາເຈົ້າຊາຍ ແລະ ກະສັດເຫຼົ່ານັ້ນຢ່າງເປັນທາງການ. ພວກເຂົາຈະຖືກພິພາກສາອີງຕາມສິ່ງທີ່ເກີດຂຶ້ນໃນເວລານີ້. ແນວໃດກໍຕາມ, ມັນບໍ່ໄດ້ຊັບຊ້ອນແບບທີ່ພວກເຈົ້າຈິນຕະນາການ, ມັນຈະສຳເລັດລົງໃນທັນທີ. ພວກເຈົ້າບໍ່ຈຳເປັນຕ້ອງຟື້ນຄືນຈາກຄວາມຕາຍ ແລະ ພວກເຈົ້າກໍບໍ່ຈຳເປັນແມ່ນແຕ່ຈະທົນທຸກ (ຍ້ອນວ່າຄວາມທຸກທໍລະມານ ແລະ ຄວາມລຳບາກຂອງພວກເຈົ້າເທິງແຜ່ນດິນໂລກໄດ້ມາຮອດຈຸດຈົບແລ້ວ ແລະ ເຮົາໄດ້ກ່າວແລ້ວວ່າ ຫຼັງຈາກນີ້ເຮົາຈະບໍ່ຈັດການກັບລູກຊາຍກົກຂອງເຮົາອີກຕໍ່ໄປ). ລູກຊາຍກົກຈະຊື່ນຊົມພອນຂອງພວກເຂົາ ດັ່ງທີ່ໄດ້ກ່າວເຖິງໃນຄວາມຈິງທີ່ວ່າ ເຈົ້າຈະເຂົ້າສູ່ໂລກຝ່າຍວິນຍານໂດຍບໍ່ຮູ້ຕົວ. ເປັນຫຍັງເຮົາຈຶ່ງເວົ້າວ່ານີ້ແມ່ນຄວາມເມດຕາ ແລະ ພຣະຄຸນຂອງເຮົາ? ຖ້າຄົນໜຶ່ງສາມາດເຂົ້າສູ່ໂລກຝ່າຍວິນຍານຫຼັງຈາກຟື້ນຄືນຈາກຄວາມຕາຍເທົ່ານັ້ນ, ນີ້ກໍຈະໄກຈາກຄວາມເມດຕາ ແລະ ຄວາມກະລຸນາ. ດັ່ງນັ້ນ ນີ້ແມ່ນການສະແດງອອກທີ່ເຫັນໄດ້ຊັດເຈນທີ່ສຸດຂອງຄວາມເມດຕາ ແລະ ພຣະຄຸນຂອງເຮົາ ແລະ ຍິ່ງໄປກວ່ານັ້ນ, ສິ່ງນີ້ເປີດເຜີຍໃຫ້ເຫັນເຖິງການກຳນົດໄວ້ລ່ວງໜ້າຂອງເຮົາ ແລະ ການຄັດເລືອກຄົນຂອງເຮົາ. ມັນພຽງພໍທີ່ສາມາດສະແດງໃຫ້ເຫັນໄດ້ວ່າ ບັດນີ້ການປົກຄອງຂອງເຮົານັ້ນເຂັ້ມງວດພຽງໃດ. ເຮົາຈະມີຄວາມກະລຸນາຕໍ່ໃຜກໍຕາມທີ່ເຮົາປາຖະໜາ ແລະ ມີຄວາມເມດຕາຕໍ່ໃຜກໍຕາມທີ່ເຮົາປາຖະໜາ. ບໍ່ມີໃຜທີ່ຈະໂຕ້ແຍ້ງ ຫຼື ຕໍ່ສູ້. ເຮົາຈະຕັດສິນໃຈທັງໝົດນີ້.

ຄົນບໍ່ສາມາດຄິດອອກໄດ້ ແລະ ພວກເຂົາກົດດັນຕົວເອງຈົນພວກເຂົາບໍ່ສາມາດຫາຍໃຈໄດ້, ແຕ່ມັນກໍເປັນພວກເຂົາທີ່ຜູກມັດຕົວເອງ. ຄວາມຄິດຂອງຄົນນັ້ນມີຈຳກັດແທ້ໆ, ດັ່ງນັ້ນພວກເຂົາຈຶ່ງເຮັດຕາມຄວາມຄິດ ແລະ ແນວຄວາມຄິດຂອງມະນຸດ. ເພາະສະນັ້ນ, ເຮົາຕ້ອງອອກຈາກເນື້ອໜັງ ແລະ ເຂົ້າສູ່ໂລກຝ່າຍວິນຍານເພື່ອຄວບຄຸມທຸກສິ່ງ, ເພື່ອຄຸ້ມຄອງທຸກສິ່ງ. ນີ້ແມ່ນວິທີດຽວທີ່ຈະປົກຄອງທຸກຄົນ ແລະ ທຸກຊົນຊາດ ແລະ ເພື່ອປະຕິບັດຄວາມປະສົງຂອງເຮົາ. ມັນບໍ່ໄດ້ໄກເກີນໄປ. ພວກເຈົ້າບໍ່ມີຄວາມສັດທາໃນອຳນາດອັນໄພສານຂອງເຮົາ ແລະ ເຈົ້າບໍ່ຮູ້ວ່າເຮົາແມ່ນໃຜ. ເຈົ້າຄິດວ່າ

ເຮົາເປັນພຽງມະນຸດຄົນໜຶ່ງເທົ່ານັ້ນ ແລະ ເຈົ້າບໍ່ສາມາດເຫັນຄວາມເປັນພຣະເຈົ້າຂອງເຮົາເລີຍ. ສິ່ງຕ່າງໆຈະສົມບູນເມື່ອໃດກໍຕາມທີ່ເຮົາຕ້ອງການໃຫ້ພວກມັນສົມບູນ. ທັງໝົດທີ່ຕ້ອງໃຊ້ແມ່ນຄຳເວົ້າໜຶ່ງຈາກປາກຂອງເຮົາ. ພວກເຈົ້າພຽງແຕ່ເອົາໃຈໃສ່ຕໍ່ລັກສະນະຂອງຄວາມເປັນມະນຸດຂອງເຮົາໃນສິ່ງທີ່ເຮົາຫາກໍກ່າວມາ ແລະ ໃນການທຸກໆການເຄື່ອນໄຫວຂອງເຮົາ, ແຕ່ເຈົ້າບໍ່ໄດ້ໃສ່ໃຈໃນລັກສະນະຂອງຄວາມເປັນພຣະເຈົ້າຂອງເຮົາ. ນັ້ນໝາຍຄວາມວ່າ ເຈົ້າຄິດວ່າເຮົາກໍມີຄວາມຄິດ ແລະ ແນວຄວາມຄິດເຊັ່ນກັນ. ແຕ່ເຮົາໄດ້ເວົ້າແລ້ວວ່າຄວາມຄິດ, ແນວຄວາມຄິດ ແລະ ຈິດໃຈຂອງເຮົາ, ທຸກການເຄື່ອນໄຫວຂອງເຮົາ, ທຸກສິ່ງທີ່ເຮົາກະທຳ ແລະ ທຸກສິ່ງທີ່ເຮົາກ່າວ ແມ່ນການສະແດງອອກທີ່ສົມບູນແບບຂອງພຣະເຈົ້າເອງ. ພວກເຈົ້າລືມສິ່ງທັງໝົດນີ້ແລ້ວບໍ? ພວກເຈົ້າທັງໝົດເປັນຄົນສັບສົນ! ເຈົ້າບໍ່ເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາ. ເຮົາໄດ້ອະນຸຍາດໃຫ້ພວກເຈົ້າເຫັນລັກສະນະຄວາມເປັນມະນຸດທຳມະດາຂອງເຮົາຈາກສິ່ງທີ່ເຮົາໄດ້ກ່າວ (ເຮົາໄດ້ອະນຸຍາດໃຫ້ພວກເຈົ້າເຫັນຄວາມເປັນມະນຸດທຳມະດາຂອງເຮົາໃນຊີວິດປະຈຳວັນຂອງເຮົາ, ໃນຄວາມເປັນຈິງ, ຍ້ອນວ່າພວກເຈົ້າຍັງບໍ່ເຂົ້າໃຈລັກສະນະຄວາມເປັນມະນຸດທຳມະດາຂອງເຮົາຈາກສິ່ງທີ່ເຮົາໄດ້ກ່າວໃນໄລຍະເວລານີ້), ແຕ່ເຈົ້າບໍ່ເຂົ້າໃຈຄວາມເປັນມະນຸດທຳມະດາຂອງເຮົາ ແລະ ເຈົ້າພຽງແຕ່ພະຍາຍາມຈະຈັບເອົາບາງສິ່ງບາງຢ່າງທີ່ສາມາດໃຊ້ຕໍ່ຕ້ານເຮົາ, ເຈົ້າດື້ດ້ານຢູ່ຕໍ່ໜ້າເຮົາ. ເຈົ້າຕາບອດ! ເຈົ້າມັນໂງ່ຈ້າ! ເຈົ້າບໍ່ຮູ້ຈັກເຮົາ! ເຮົາໄດ້ເວົ້າຢ່າງສູນເປົ່າເປັນເວລາດົນແລ້ວ! ພວກເຈົ້າບໍ່ໄດ້ຮູ້ຈັກເຮົາເລີຍ ແລະ ພວກເຈົ້າພຽງແຕ່ບໍ່ໃສ່ໃຈຄວາມເປັນມະນຸດທຳມະດາຂອງເຮົາວ່າເປັນສ່ວນໜຶ່ງຂອງພຣະເຈົ້າທີ່ສົມບູນແບບ! ຈະບໍ່ໃຫ້ເຮົາໂກດຮ້າຍໄດ້ແນວໃດ? ຈະໃຫ້ເຮົາມີຄວາມເມດຕາໄດ້ອີກແນວໃດ? ເຮົາພຽງແຕ່ສາມາດຕອບໂຕ້ເດັກນ້ອຍທີ່ບໍ່ເຊື່ອຟັງເຫຼົ່ານີ້ດ້ວຍຄວາມໂກດຮ້າຍຂອງເຮົາເທົ່ານັ້ນ. ພວກເຈົ້າທະນົງຕົວແທ້ໆ, ພວກເຈົ້າບໍ່ຮູ້ຈັກເຮົາເລີຍ! ເຈົ້າຄິດວ່າເຮົາໄດ້ເຮັດຜິດ! ເຮົາສາມາດເຮັດຜິດໄດ້ບໍ? ເຮົາຈະເລືອກຮ່າງກາຍຝ່າຍເນື້ອໜັງໃດໜຶ່ງຢ່າງບໍ່ລະມັດລະວັງ ເພື່ອມາບັງເກີດເປັນມະນຸດບໍ? ຄວາມເປັນມະນຸດຂອງເຮົາ ແລະ ຄວາມເປັນພຣະເຈົ້າຂອງເຮົາ ແມ່ນສອງພາກສ່ວນທີ່ບໍ່ສາມາດແຍກອອກຈາກກັນໄດ້ ເຊິ່ງປະກອບເປັນພຣະເຈົ້າທີ່ສົມບູນແບບ. ຕອນນີ້ ພວກເຈົ້າຄວນຊັດເຈນກ່ຽວກັບເລື່ອງນີ້ຢ່າງສົມບູນແບບ! ພຣະທຳຂອງເຮົາໄດ້ບັນລຸຈຸດສູງສຸດຂອງມັນແລ້ວ ແລະ ພຣະທຳຂອງເຮົາບໍ່ສາມາດຖືກອະທິບາຍໄດ້ກວ້າງກວ່ານີ້ອີກຕໍ່ໄປ!

# ບົດທີ 99

ຍ້ອນບາດກ້າວພາລະກິດຂອງເຮົາກຳລັງກ້າວໄວຂຶ້ນ ຈຶ່ງບໍ່ມີໃຜສາມາດນຳທັນບາດກ້າວຂອງເຮົາໄດ້ ແລະ ບໍ່ມີໃຜສາມາດຢັ່ງເຖິງຈິດໃຈຂອງເຮົາໄດ້, ແຕ່ນີ້ແມ່ນວິທີດຽວທີ່ຈະກ້າວໄປຂ້າງໜ້າ. ນີ້ແມ່ນ "ຄວາມຕາຍ" (ໝາຍເຖິງ ການທີ່ບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາໄດ້, ບໍ່ສາມາດເຂົ້າໃຈສິ່ງທີ່ເຮົາໝາຍເຖິງຈາກພຣະທຳຂອງເຮົາ; ນີ້ແມ່ນອີກຄຳອະທິບາຍກ່ຽວກັບ "ຄວາມຕາຍ" ແລະ ບໍ່ໄດ້ໝາຍຄວາມວ່າ "ຖືກປະຖິ້ມໂດຍພຣະວິນຍານຂອງເຮົາ") ໃນໄລຍະ "ການຟື້ນຄືນຊີບຈາກຄວາມຕາຍ" ເຊິ່ງໄດ້ກ່າວມາແລ້ວ. ເມື່ອພວກເຈົ້າ ແລະ ເຮົາໄດ້ປ່ຽນຈາກໄລຍະນີ້ເປັນຮ່າງກາຍ, ເມື່ອນັ້ນຄວາມໝາຍທີ່ແທ້ຈິງຂອງ "ການຟື້ນຄືນຊີບຈາກຄວາມຕາຍ" ກໍຈະຖືກບັນລຸ (ນັ້ນກໍຄື, ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງການຟື້ນຄືນຊີບຈາກຄວາມຕາຍ). ປັດຈຸບັນ, ນີ້ແມ່ນສະພາບທີ່ພວກເຈົ້າທັງໝົດດຳລົງຢູ່: ພວກເຈົ້າບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ ແລະ ພວກເຈົ້າບໍ່ສາມາດຊອກເຫັນບາດກ້າວຂອງເຮົາ. ຍິ່ງໄປກວ່ານັ້ນ, ພວກເຈົ້າບໍ່ສາມາດສະຫງົບໃນວິນຍານຂອງພວກເຈົ້າໄດ້, ດັ່ງນັ້ນພວກເຈົ້າຈຶ່ງຮູ້ສຶກອຶດອັດໃຈ. ສະພາບແບບນີ້ແມ່ນ "ຄວາມທໍລະມານ" ຢ່າງແທ້ຈິງທີ່ເຮົາກ່າວເຖິງ ແລະ ຜູ້ຄົນບໍ່ສາມາດທົນຕໍ່ຄວາມທໍລະມານນີ້ໄດ້, ດ້ານໜຶ່ງພວກເຈົ້າກຳລັງຄິດເຖິງອະນາຄົດຂອງຕົວເອງ, ອີກດ້ານໜຶ່ງພວກເຈົ້າຍອມຮັບການເຜົາໄໝ້ ແລະ ການພິພາກສາຂອງເຮົາ ເຊິ່ງກຳລັງສຸມຍິງ ແລະ ໂຈມຕີພວກເຈົ້າຈາກທຸກທິດທາງ. ນອກນັ້ນ, ພວກເຈົ້າຍັງບໍ່ເຂົ້າໃຈກົດເກນຈາກນໍ້າສຽງ ແລະ ທ່າທາງທີ່ເຮົາກ່າວ ແລະ ໃນມື້ໜຶ່ງການກ່າວຈະມີນໍ້າສຽງຫຼາຍປະເພດ ເພື່ອວ່າ ພວກເຈົ້າຈະໄດ້ທົນທຸກຢ່າງໃຫຍ່ຫຼວງ. ສິ່ງເຫຼົ່ານີ້ແມ່ນຂັ້ນຕອນໃນພາລະກິດຂອງເຮົາ. ນີ້ແມ່ນສະຕິປັນຍາຂອງເຮົາ. ໃນອະນາຄົດ, ພວກເຈົ້າຈະປະສົບກັບຄວາມທຸກທໍລະມານໃນລັກສະນະນີ້ຫຼາຍຂຶ້ນ ເຊິ່ງທັງໝົດນີ້ແມ່ນເພື່ອເປີດເຜີຍຄົນໜ້າຊື່ໃຈຄົດທັງໝົດ. ບັດນີ້ ສິ່ງນີ້ຄວນຊັດເຈນແລ້ວ! ນີ້ແມ່ນວິທີທີ່ເຮົາປະຕິບັດພາລະກິດ. ດ້ວຍແຮງຈູງໃຈຈາກຄວາມທຸກທໍລະມານແບບນີ້ ແລະ ຫຼັງຈາກທີ່ໄດ້ປະສົບກັບຄວາມເຈັບປວດນີ້ ເຊິ່ງທຽບເທົ່າກັບຄວາມຕາຍ, ພວກເຈົ້າຈະໄດ້ເຂົ້າສູ່ອີກອານາຈັກໜຶ່ງ. ພວກເຈົ້າຈະໄດ້ເຂົ້າສູ່ຮ່າງກາຍ ແລະ ຂຶ້ນປົກຄອງທຸກຊາດ ແລະ ທຸກຄົນຮ່ວມກັບເຮົາ.

ເປັນຫຍັງບໍ່ດົນມານີ້ເຮົາຈຶ່ງເວົ້າດ້ວຍນໍ້າສຽງທີ່ຮຸນແຮງຫຼາຍ? ເປັນຫຍັງນໍ້າສຽງຂອງເຮົາຈຶ່ງປ່ຽນຢູ່ເລື້ອຍໆ ແລະ ເປັນຫຍັງວິທີການເຮັດວຽກຂອງເຮົາກໍປ່ຽນແປງຢູ່ເລື້ອຍໆເຊັ່ນກັນ? ສະຕິປັນຍາຂອງເຮົາຢູ່ໃນສິ່ງເຫຼົ່ານີ້. ພຣະທຳຂອງເຮົາຖືກກ່າວສຳລັບທຸກຄົນທີ່ຍອມຮັບຊື່ນີ້ (ບໍ່ວ່າພວກເຂົາຈະເຊື່ອວ່າພຣະທຳຂອງເຮົາຈະສາມາດເຮັດສຳເລັດໄດ້ ຫຼື ບໍ່ກໍຕາມ), ດັ່ງນັ້ນ ພຣະທຳຂອງເຮົາຄວນຖືກໄດ້ຍິນ ແລະ ໄດ້ເຫັນໂດຍທຸກຄົນ, ພວກມັນຈະຕ້ອງບໍ່ຖືກສະກັດກັ້ນ ຍ້ອນວ່າເຮົາມີວິທີປະຕິບັດພາລະກິດຂອງເຮົາ ແລະ ເຮົາມີສະຕິປັນຍາຂອງເຮົາ. ເຮົາໃຊ້ພຣະທຳຂອງເຮົາເພື່ອພິພາກສາຄົນ, ເພື່ອເປີດເຜີຍຄົນ ແລະ ເພື່ອເປີດເຜີຍທາດແທ້ຂອງມະນຸດ. ສະນັ້ນ, ເຮົາຄັດເລືອກບັນດາຜູ້ທີ່ຖືກເຮົາເລືອກ ແລະ ເຮົາກຳຈັດບັນດາຜູ້ທີ່ບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າ ຫຼື ຖືກເຮົາເລືອກ. ທັງໝົດນີ້ແມ່ນສະຕິປັນຍາຂອງ

ເຮົາ ແລະ ມັນແມ່ນຄວາມມະຫັດສະຈັນຂອງພາລະກິດຂອງເຮົາ. ນີ້ແມ່ນວິທີການຂອງເຮົາໃນໄລຍະນີ້ຂອງພາລະກິດຂອງເຮົາ. ທ່າມກາງຜູ້ຄົນ, ມີຜູ້ໃດທີ່ສາມາດເຂົ້າໃຈຄວາມປະສົງຂອງເຮົາບໍ? ທ່າມກາງຜູ້ຄົນ, ມີຜູ້ໃດທີ່ສາມາດພິຈາລະນາເຖິງພາລະຂອງເຮົາບໍ? ຜູ້ທີ່ປະຕິບັດພາລະກິດແມ່ນເຮົາ ເຊິ່ງກໍຄືພຣະເຈົ້າເອງ. ມັນຈະມີມື້ໜຶ່ງທີ່ພວກເຈົ້າຈະເຂົ້າໃຈຄວາມໝາຍຂອງພຣະທຳເຫຼົ່ານີ້ຂອງເຮົາຢ່າງຄົບຖ້ວນ ແລະ ພວກເຈົ້າກໍຈະຊັດເຈນກ່ຽວກັບເຫດຜົນທີ່ເຮົາຢາກກ່າວພຣະທຳເຫຼົ່ານີ້ຢ່າງສົມບູນ. ສະຕິປັນຍາຂອງເຮົານັ້ນບໍ່ສິ້ນສຸດ, ແນ່ນອນ ແລະ ບໍ່ສາມາດວັດແທກໄດ້ ແລະ ມະນຸດບໍ່ສາມາດເຂົ້າໃຈໄດ້ຢ່າງຄົບຖ້ວນ. ມະນຸດເຫັນພຽງພາກສ່ວນດຽວຈາກສິ່ງທີ່ເຮົາກະທຳ, ແຕ່ເຖິງຢ່າງນັ້ນ ສິ່ງທີ່ພວກເຂົາເຫັນກໍຍັງມີຂໍ້ບົກຜ່ອງ ແລະ ບໍ່ສົມບູນ. ເມື່ອພວກເຈົ້າໄດ້ປ່ຽນຈາກໄລຍະນີ້ໄປສູ່ໄລຍະໃໝ່ຢ່າງສົມບູນ, ພວກເຈົ້າກໍຈະສາມາດເຫັນມັນໄດ້ຢ່າງຊັດເຈນ. ຈົ່ງຈື່ເອົາໄວ້! ຕອນນີ້ແມ່ນຍຸກສະໄໝທີ່ລ້ຳຄ່າທີ່ສຸດ, ມັນແມ່ນໄລຍະສຸດທ້າຍທີ່ພວກເຈົ້າຢູ່ໃນເນື້ອໜັງ. ຊີວິດຂອງພວກເຈົ້າຕອນນີ້ແມ່ນຊີວິດຝ່າຍຮ່າງກາຍສຸດທ້າຍຂອງພວກເຈົ້າ. ເມື່ອພວກເຈົ້າເຂົ້າສູ່ໂລກຝ່າຍວິນຍານຈາກເນື້ອໜັງ, ເວລານັ້ນຄວາມເຈັບປວດທັງໝົດກໍຈະຈາກພວກເຈົ້າໄປ. ພວກເຈົ້າຈະປິຕິຍິນດີ ແລະ ມີຄວາມສຸກຢ່າງຍິ່ງ ແລະ ພວກເຈົ້າຈະໂດດເຕັ້ນດີໃຈຢ່າງບໍ່ຢຸດຢັ້ງ. ແຕ່ພວກເຈົ້າຕ້ອງຊັດເຈນວ່າພຣະທຳເຫຼົ່ານີ້ທີ່ເຮົາກ່າວແມ່ນສຳລັບລູກຊາຍກົກເທົ່ານັ້ນ, ຍ້ອນວ່າມີພຽງລູກຊາຍກົກເທົ່ານັ້ນທີ່ຄູ່ຄວນກັບພອນນີ້. ການເຂົ້າສູ່ໂລກຝ່າຍວິນຍານແມ່ນພອນທີ່ຍິ່ງໃຫຍ່ທີ່ສຸດ, ພອນສູງສຸດ ແລະ ສິ່ງທີ່ມີຄຸນຄ່າທີ່ສຸດທີ່ໄດ້ຮັບ. ສິ່ງທີ່ພວກເຈົ້າໄດ້ຮັບເພື່ອກິນ ແລະ ນຸ່ງໃນຕອນນີ້ ແມ່ນບໍ່ມີຫຍັງຫຼາຍໄປກວ່າຄວາມສຸກຂອງເນື້ອໜັງ; ພວກມັນແມ່ນພຣະຄຸນ ແລະ ເຮົາບໍ່ໄດ້ສົນໃຈໃນສິ່ງເຫຼົ່ານີ້. ຈຸດສຸມຂອງພາລະກິດເຮົາແມ່ນຢູ່ໃນໄລຍະຕໍ່ໄປ (ການເຂົ້າສູ່ໂລກຝ່າຍວິນຍານ ແລະ ການເຜະຊິນໜ້າກັບໂລກຈັກກະວານ).

ເຮົາໄດ້ເວົ້າວ່າມັງກອນແດງຜູ້ຍິ່ງໃຫຍ່ໄດ້ຖືກເຮົາໂຍນລົງ ແລະ ທຳລາຍແລ້ວ. ພວກເຈົ້າຈະບໍ່ເຊື່ອພຣະທຳຂອງເຮົາໄດ້ແນວໃດ? ເປັນຫຍັງພວກເຈົ້າຍັງປາດຖະໜາທີ່ຈະອົດທົນກັບການຂົ່ມເຫັງ ແລະ ຄວາມຍາກລຳບາກເພື່ອເຮົາ? ນີ້ບໍ່ແມ່ນລາຄາທີ່ບໍ່ຈຳເປັນສຳລັບພວກເຈົ້າທີ່ຕ້ອງຈ່າຍບໍ? ເຮົາໄດ້ເຕືອນພວກເຈົ້າຫຼາຍຄັ້ງແລ້ວວ່າພວກເຈົ້າພຽງແຕ່ຕ້ອງມີຄວາມສຸກເທົ່ານັ້ນ ໃນຂະນະທີ່ເຮົາປະຕິບັດພາລະກິດດ້ວຍຕົວເຮົາເອງເປັນການສ່ວນຕົວ. ເປັນຫຍັງພວກເຈົ້າຈຶ່ງກະຕືລືລົ້ນຢາກເຮັດສິ່ງນີ້? ພວກເຈົ້າຈັ່ງແມ່ນບໍ່ຮູ້ຈັກວິທີມີຄວາມສຸກແທ້ໆ! ເຮົາໄດ້ກະກຽມທຸກສິ່ງສຳລັບພວກເຈົ້າຢ່າງຄົບຖ້ວນ ແລ້ວເປັນຫຍັງຈຶ່ງບໍ່ມີໃຜໃນພວກເຈົ້າມາຫາເຮົາເພື່ອທວງເອົາມັນ? ພວກເຈົ້າຍັງບໍ່ແນ່ໃຈກັບສິ່ງທີ່ເຮົາໄດ້ເວົ້າ! ພວກເຈົ້າບໍ່ເຂົ້າໃຈເຮົາ! ພວກເຈົ້າຄິດວ່າເຮົາເວົ້າຫລິ້ນລ້າໆ; ພວກເຈົ້າຄືມາສັບສົນແທ້! (ການກະກຽມທີ່ຄົບຖ້ວນທີ່ເຮົາເວົ້າເຖິງໝາຍຄວາມວ່າພວກເຈົ້າຄວນເຊີດຊູເຮົາຫຼາຍຂຶ້ນ ແລະ ອະທິຖານຕໍ່ໜ້າເຮົາຫຼາຍຂຶ້ນ ໃນຂະນະທີ່ເຮົາຈະປະຕິບັດພາລະກິດດ້ວຍຕົວເອງເພື່ອສາບແຊ່ງທຸກຄົນທີ່ຕໍ່ຕ້ານເຮົາ ແລະ ເພື່ອລົງໂທດທຸກຄົນທີ່ກົດຂີ່ຂົ່ມເຫັງພວກເຈົ້າ). ພວກເຈົ້າບໍ່ຮູ້ຈັກຫຍັງກ່ຽວກັບພຣະທຳຂອງເຮົາເລີຍ! ເຮົາເປີດເຜີຍຄວາມລຶກລັບທັງໝົດຂອງເຮົາແກ່ພວກເຈົ້າ, ແຕ່ມີຈັກຄົນໃນບັນດາພວກເຈົ້າທີ່ເຂົ້າໃຈມັນໄດ້ຢ່າງແທ້ຈິງ? ມີຈັກຄົນໃນບັນດາພວກເຈົ້າທີ່ເຂົ້າໃຈມັນໄດ້ຢ່າງເລິກເຊິ່ງ? ບັນລັງຂອງເຮົາແມ່ນ

ຫຍັງ? ຄ້ອນເຫຼັກຂອງເຮົາແມ່ນຫຍັງ? ມີໃຜໃນບັນດາພວກເຈົ້າທີ່ຮູ້ແດ່? ເມື່ອເວົ້າເຖິງບັນລັງຂອງເຮົາ, ຄົນສ່ວນໃຫຍ່ຄິດວ່າແມ່ນບ່ອນທີ່ເຮົານັ່ງ ຫຼື ໝາຍເຖິງທີ່ຢູ່ອາໄສຂອງເຮົາ ຫຼື ໝາຍເຖິງເຮົາ, ໝາຍເຖິງຕົວຕົນທີ່ເຮົາເປັນ. ນີ້ແມ່ນຄວາມເຂົ້າໃຈທີ່ຜິດທັງໝົດ, ເປັນພຽງຄວາມຫຍຸ້ງເຫຍີງຂອງຄວາມເຂົ້າໃຈເທົ່ານັ້ນ! ຄວາມໝາຍເຫຼົ່ານີ້ບໍ່ຖືກຕ້ອງ, ແມ່ນບໍ? ນີ້ແມ່ນວິທີທີ່ພວກເຈົ້າທັງຫຼາຍເຂົ້າໃຈ ແລະ ຢັ່ງຮູ້ໄດ້, ນີ້ເປັນພຽງການບ່ຽງເບນຄວາມເຂົ້າໃຈຢ່າງແຮງ! ສິດອຳນາດແມ່ນຫຍັງ? ແມ່ນຫຍັງຄືຄວາມສຳພັນລະຫວ່າງສິດອຳນາດ ແລະ ບັນລັງ? ບັນລັງແມ່ນສິດອຳນາດຂອງເຮົາ. ເມື່ອລູກຊາຍກົກຂອງເຮົາຍົກສູງບັນລັງຂອງເຮົາ, ນັ້ນແມ່ນເວລາທີ່ລູກຊາຍກົກຂອງເຮົາຈະໄດ້ຮັບສິດອຳນາດຈາກເຮົາ. ມີພຽງເຮົາທີ່ມີສິດອຳນາດ, ດັ່ງນັ້ນຈຶ່ງມີພຽງເຮົາທີ່ມີບັນລັງ. ເວົ້າອີກຢ່າງໜຶ່ງກໍຄື ຫຼັງຈາກລູກຊາຍກົກຂອງເຮົາໄດ້ທົນທຸກແບບດຽວກັບທີ່ເຮົາທົນທຸກ, ພວກເຂົາກໍຈະຍອມຮັບສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີ ແລະ ຈະໄດ້ຮັບທຸກສິ່ງທຸກຢ່າງຈາກເຮົາ; ນີ້ແມ່ນຂະບວນການສຳລັບພວກເຂົາທີ່ຈະໄດ້ຮັບສະຖານະຂອງລູກຊາຍກົກ. ມັນຈະແມ່ນເວລາທີ່ລູກຊາຍກົກຂອງເຮົາຍົກສູງບັນລັງຂອງເຮົາ ແລະ ນີ້ກໍຈະເປັນເວລາທີ່ພວກເຂົາຈະຍອມຮັບສິດອຳນາດຈາກເຮົາເຊັ່ນກັນ. ພວກເຈົ້າຄວນເຂົ້າໃຈເລື່ອງນີ້! ທຸກສິ່ງທີ່ເຮົາກ່າວແມ່ນຊັດເຈນ ແລະ ບໍ່ມີການແອບແຝງທັງສິ້ນ ເພື່ອວ່າທຸກຄົນຈະເຂົ້າໃຈ. ຈົ່ງວາງແນວຄວາມຄິດຂອງພວກເຈົ້າເອງໄວ້ທາງຂ້າງ ແລະ ລໍຖ້າຮັບເອົາຄວາມເລິກລັບທີ່ເຮົາເປີດເຜີຍແກ່ພວກເຈົ້າ! ແລ້ວແມ່ນຫຍັງຄືຄ້ອນເຫຼັກ? ໃນໄລຍະຜ່ານມາ, ມັນໝາຍເຖິງພຣະທຳທີ່ຮຸນແຮງຂອງເຮົາ, ແຕ່ຕອນນີ້ມັນແຕກຕ່າງຈາກອະດີດ: ປັດຈຸບັນນີ້ຄ້ອນເຫຼັກໝາຍເຖິງການກະທຳຂອງເຮົາ ເຊິ່ງແມ່ນໄພພິບັດອັນຍິ່ງໃຫຍ່ທີ່ເຕັມໄປດ້ວຍສິດອຳນາດ. ດັ່ງນັ້ນ, ເມື່ອໃດກໍຕາມທີ່ກ່າວເຖິງຄ້ອນເຫຼັກ, ມັນຈະເຊື່ອມໂຍງກັບສິດອຳນາດຢູ່ສະເໝີ. ຄວາມໝາຍເດີມຂອງຄ້ອນເຫຼັກທີ່ຖືກກ່າວເຖິງໃນມຸມມອງຂອງໄພພິບັດອັນຍິ່ງໃຫຍ່ ຄືພາກສ່ວນຂອງສິດອຳນາດ. ທຸກຄົນຕ້ອງເຫັນເລື່ອງນີ້ຢ່າງຊັດເຈນ ເພື່ອວ່າພວກເຂົາຈະສາມາດເຂົ້າໃຈຄວາມປະສົງຂອງເຮົາ ແລະ ໄດ້ຮັບການເປີດເຜີຍຈາກພຣະທຳຂອງເຮົາ. ໃຜກໍຕາມທີ່ມີພາລະກິດຂອງພຣະວິນຍານບໍລິສຸດທີ່ຖືຄ້ອນເຫຼັກໃນມືຂອງພວກເຂົາ ແມ່ນຜູ້ທີ່ມີສິດອຳນາດ ແລະ ມີສິດທີ່ຈະດຳເນີນໄພພິບັດທີ່ຍິ່ງໃຫຍ່. ນີ້ແມ່ນໜຶ່ງໃນພຣະດຳລັດແຫ່ງການບໍລິຫານຂອງເຮົາ.

ທຸກສິ່ງ ແລະ ທຸກຢ່າງໄດ້ເປີດອອກສຳລັບພວກເຈົ້າ (ນີ້ໝາຍເຖິງພາກສ່ວນທີ່ມີການຊີ້ໃຫ້ເຫັນຢ່າງຊັດເຈນ) ແລະ ທຸກສິ່ງທຸກຢ່າງໄດ້ປິດບັງຈາກພວກເຈົ້າ (ນີ້ໝາຍເຖິງພາກສ່ວນລີ້ລັບຂອງພຣະທຳຂອງເຮົາ). ເຮົາກ່າວດ້ວຍສະຕິປັນຍາ: ເຮົາໃຫ້ພວກເຈົ້າເຂົ້າໃຈພຽງແຕ່ຄວາມໝາຍຕາມຕົວຂອງພຣະທຳບາງຂໍ້ຂອງເຮົາເທົ່ານັ້ນ ໃນຂະນະທີ່ເຮົາໃຫ້ພວກເຈົ້າຢັ່ງຮູ້ເຖິງຄວາມໝາຍຂອງພຣະທຳຂໍ້ອື່ນໆ (ແຕ່ຄົນສ່ວນຫຼາຍບໍ່ສາມາດເຂົ້າໃຈໄດ້), ຍ້ອນວ່ານີ້ແມ່ນລຳດັບພາລະກິດຂອງເຮົາ. ເຮົາສາມາດບອກຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາແກ່ພວກເຈົ້າເມື່ອພວກເຈົ້າບັນລຸລະດັບໃດໜຶ່ງເທົ່ານັ້ນ. ນີ້ແມ່ນສະຕິປັນຍາຂອງເຮົາ ແລະ ສິ່ງເຫຼົ່ານີ້ແມ່ນການກະທຳອັນໜ້າອັດສະຈັນຂອງເຮົາ (ເພື່ອເຮັດໃຫ້ພວກເຈົ້າສົມບູນ ແລະ ເພື່ອເອົາຊະນະຊາຕານໂດຍສົມບູນ ແລະ ເຮັດໃຫ້ມານຮ້າຍອັບອາຍ). ຈົນກວ່າພວກເຈົ້າໄດ້ເຂົ້າສູ່ອານາຈັກອື່ນ ພວກເຈົ້າຈຶ່ງຈະສາມາດເຂົ້າໃຈໄດ້ຢ່າງຄົບຖ້ວນ. ເຮົາຕ້ອງປະຕິບັດ

ມັນດ້ວຍວິທີນີ້ ຍ້ອນວ່າໃນຄວາມຄິດມະນຸດມີຫຼາຍສິ່ງທີ່ຜູ້ຄົນບໍ່ສາມາດເຂົ້າໃຈໄດ້ ແລະ ເຖິງແມ່ນວ່າເຮົາຈະກ່າວຢ່າງຊັດເຈນ ພວກເຈົ້າກໍຍັງຈະບໍ່ເຂົ້າໃຈ. ແນວຄິດຂອງມະນຸດມີຂີດຈຳກັດ ແລະ ມີຫຼາຍສິ່ງທີ່ເຮົາສາມາດສື່ເຖິງພວກເຈົ້າໄດ້ກໍຕໍ່ເມື່ອພວກເຈົ້າໄດ້ເຂົ້າສູ່ໂລກຝ່າຍວິນຍານເທົ່ານັ້ນ; ບໍ່ດັ່ງນັ້ນ, ເນື້ອໜັງຂອງມະນຸດກໍຈະບໍ່ສາມາດເຮັດໜ້າທີ່ນີ້ໄດ້ ແລະ ນີ້ກໍຈະເປັນການຂັດຂວາງການຄຸ້ມຄອງຂອງເຮົາເທົ່ານັ້ນ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງ "ລຳດັບພາລະກິດຂອງເຮົາ" ທີ່ເຮົາກ່າວເຖິງ. ໃນຄວາມຄິດຂອງພວກເຈົ້າ, ພວກເຈົ້າເຂົ້າໃຈເຮົາຫຼາຍປານໃດ? ຄວາມເຂົ້າໃຈຂອງພວກເຈົ້າບໍ່ມີຂໍ້ບົກຜ່ອງບໍ? ມັນແມ່ນຄວາມຮູ້ທີ່ຢູ່ພາຍໃນວິນຍານບໍ? ເພາະສະນັ້ນ, ເຮົາຕ້ອງໃຫ້ພວກເຈົ້າຫັນປ່ຽນໄປສູ່ອານາຈັກອື່ນ ເພື່ອໃຫ້ພວກເຈົ້າສຳເລັດພາລະກິດຂອງເຮົາ ແລະ ປະຕິບັດຕາມຄວາມປະສົງຂອງເຮົາ. ແທ້ຈິງແລ້ວ ອານາຈັກອື່ນນີ້ແມ່ນຫຍັງ? ມັນແມ່ນຄວາມເຂົ້າໃຈວ່າເປັນສິ່ງເໜືອທຳມະຊາດແບບທີ່ຄົນຄິດແທ້ບໍ? ແທ້ຈິງແລ້ວມັນແມ່ນບາງສິ່ງຄືກັບອາກາດ ເຊິ່ງບໍ່ສາມາດເບິ່ງເຫັນໄດ້ ຫຼື ສຳຜັດໄດ້ ແຕ່ມີຢູ່ຈິງບໍ? ດັ່ງທີ່ເຮົາໄດ້ກ່າວ, ສະພາບຂອງການຢູ່ໃນຮ່າງກາຍແມ່ນການມີເນື້ອໜັງ ແລະ ກະດູກ, ມີຮູບຮ່າງ ແລະ ຮູບຊົງ. ນີ້ແມ່ນຈິງແທ້ແນ່ນອນ ແລະ ບໍ່ຕ້ອງສົງໄສ ແລະ ທຸກຄົນຕ້ອງເຊື່ອມັນ. ນີ້ແມ່ນສະພາບທີ່ແທ້ຈິງໃນຮ່າງກາຍ. ຍິ່ງໄປກວ່ານັ້ນ, ໃນຮ່າງກາຍບໍ່ມີເລື່ອງທີ່ຄົນກຽດຊັງ. ແຕ່ແທ້ຈິງແລ້ວສະພາບນີ້ແມ່ນຫຍັງ? ເມື່ອຄົນຜ່ານຈາກເນື້ອໜັງສູ່ຮ່າງກາຍ, ກຸ່ມໃຫຍ່ຕ້ອງປາກົດຂຶ້ນ. ເວົ້າໄດ້ວ່າ ພວກເຂົາຈະຫຼຸດພົ້ນຈາກເຮືອນທີ່ເປັນເລືອດເນື້ອຂອງພວກເຂົາ ແລະ ສາມາດເວົ້າໄດ້ວ່າແຕ່ລະຄົນຈະປະຕິບັດຕາມປະເພດຂອງຕົນ: ເນື້ອໜັງຮ່ວມໂຕກັນເປັນເນື້ອໜັງ ແລະ ຮ່າງກາຍໂຮມໂຕກັນເປັນຮ່າງກາຍ. ຕອນນີ້ ບັນດາຜູ້ທີ່ແຍກຕົວອອກຈາກເຮືອນ, ພໍ່ແມ່, ເມຍ, ຜົວ, ລູກຊາຍ ແລະ ລູກສາວຂອງພວກເຂົາ ເລີ່ມເຂົ້າສູ່ໂລກຝ່າຍວິນຍານ. ໃນທີ່ສຸດ, ມັນກໍຈະເປັນເຊັ່ນນີ້: ສະພາບການຢູ່ໃນໂລກຝ່າຍວິນຍານຈະມີລູກຊາຍກົກເຕົ້າໂຮມກັນ, ຮ້ອງເພງ ແລະ ເຕັ້ນລຳ, ສັນລະເສີນ ແລະ ເຊີດຊູນາມອັນບໍລິສຸດຂອງເຮົາ. ນີ້ເປັນສາກທີ່ງົດງາມ ແລະ ໃໝ່ຕະຫຼອດການ. ທັງໝົດແມ່ນລູກຊາຍສຸດທີ່ຮັກຂອງເຮົາ ທີ່ສັນລະເສີນເຮົາຢ່າງບໍ່ຢຸດຢັ້ງ ແລະ ຍົກສູງນາມອັນບໍລິສຸດຂອງເຮົາຕະຫຼອດໄປ. ນີ້ແມ່ນສະພາບການຫຼັງຈາກເຂົ້າສູ່ໂລກຝ່າຍວິນຍານ, ນີ້ແມ່ນພາລະກິດຫຼັງຈາກເຂົ້າສູ່ໂລກຝ່າຍວິນຍານອີກດ້ວຍ ແລະ ນີ້ຍັງແມ່ນສະຖານະການທີ່ເຮົາໄດ້ກ່າວເຖິງກ່ຽວກັບການລ້ຽງດູຄຣິສຕະຈັກໃນໂລກຝ່າຍວິນຍານ. ຍິ່ງໄປກວ່ານັ້ນ, ຕົວຕົນຂອງເຮົາກໍຈະປາກົດຕົວຕໍ່ທຸກຊາດໃນຈັກກະວານ ແລະ ທ່າມກາງທຸກຊາດ ແລະ ທຸກຄົນ; ແບກຮັບສິດອຳນາດຂອງເຮົາ, ຄວາມໂກດຮ້າຍຂອງເຮົາ ແລະ ການພິພາກສາຂອງເຮົາ ແລະ ນອກນັ້ນກໍຈະແບກຮັບຄ້ອນເຫຼັກຂອງເຮົາເພື່ອປົກຄອງທຸກຊາດ ແລະ ທຸກຄົນ. ທ່າມກາງທຸກຄົນ ແລະ ຈັກກະວານທັງປວງ ສິ່ງນີ້ເປັນພະຍານໃຫ້ແກ່ເຮົາທີ່ສັ່ນສະເທືອນສະຫວັນ ແລະ ແຜ່ນດິນໂລກ ເຊິ່ງເຮັດໃຫ້ທຸກຄົນ ແລະ ທຸກສິ່ງທີ່ຢູ່ເທິງພູ, ໃນແມ່ນ້ຳ, ໃນທະເລສາບ ແລະ ສຸດແຜ່ນດິນໂລກສັນລະເສີນເຮົາ ແລະ ເຊີດຊູເຮົາ, ຮູ້ຈັກເຮົາຜູ້ເປັນພຣະເຈົ້າອົງດຽວ ຜູ້ທີ່ເປັນພຣະຜູ້ສ້າງຂອງທຸກສິ່ງ ແລະ ເປັນຜູ້ນຳທາງທຸກສິ່ງ, ຄຸ້ມຄອງທຸກສິ່ງ, ພິພາກສາທຸກສິ່ງ, ເຮັດໃຫ້ທຸກສິ່ງສຳເລັດ, ລົງໂທດທຸກສິ່ງ ແລະ ທຳລາຍທຸກສິ່ງ. ນີ້ແມ່ນການປາກົດຕົວທີ່ແທ້ຈິງຂອງຕົວຕົນຂອງເຮົາ.

# ບົດທີ 100

ເຮົາກຽດຊັງທຸກຄົນທີ່ບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າ ແລະ ຖືກເລືອກໂດຍເຮົາ. ເພາະສະນັ້ນ ເຮົາຕ້ອງເອົາຄົນເຫຼົ່ານີ້ອອກໄປຈາກເຮືອນຂອງເຮົາເທື່ອລະຄົນ ແລ້ວດ້ວຍເຫດນັ້ນຈຶ່ງເຮັດໃຫ້ວິຫານຂອງເຮົາບໍລິສຸດ ແລະ ບໍ່ມີມົນທິນ, ເຮືອນຂອງເຮົາໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ, ຊື່ອັນບໍລິສຸດຂອງເຮົາແມ່ນສາມາດເຜີຍແຜ່ໄປຕະຫຼອດການ ແລະ ຄົນບໍລິສຸດຂອງເຮົາສາມາດກາຍເປັນສຸດທີ່ຮັກຂອງເຮົາໄດ້. ສາກແບບນີ້, ເຮືອນແບບນີ້, ລາຊະອານາຈັກແບບນີ້ແມ່ນເປົ້າໝາຍຂອງເຮົາ ແລະ ທີ່ຢູ່ອາໃສຂອງເຮົາ; ນີ້ແມ່ນພື້ນຖານແຫ່ງການຊົງສ້າງທຸກສິ່ງຂອງເຮົາ. ບໍ່ມີໃຜທີ່ອາດແກວ່ງ ຫຼື ປ່ຽນແປງມັນໄດ້. ຈະມີພຽງແຕ່ເຮົາ ແລະ ບຸດຊາຍສຸດທີ່ຮັກຂອງເຮົາເທົ່ານັ້ນທີ່ອາໄສຢູ່ຮ່ວມກັບພາຍໃນມັນ ແລະ ຈະບໍ່ມີໃຜໄດ້ຮັບອະນຸຍາດໃຫ້ຢຽບຢໍ້າມັນລົງໃຕ້ຕີນໄດ້, ບໍ່ມີຫຍັງທີ່ຈະໄດ້ຮັບອະນຸຍາດໃຫ້ຄອບຄອງມັນ ແລະ ແຮງແລ້ວທີ່ສິ່ງທີ່ບໍ່ພຶງປະສົງຈະໄດ້ຮັບອະນຸຍາດໃຫ້ເກີດຂຶ້ນໄດ້. ທັງໝົດຈະແມ່ນການສັນລະເສີນ ແລະ ການເຊີດຊູ ແລະ ທັງໝົດຈະເປັນສາກທີ່ມະນຸດບໍ່ສາມາດຈິນຕະນາການໄດ້. ເຮົາປາດຖະໜາພຽງແຕ່ວ່າພວກເຈົ້າຖະຫວາຍພາລະກຳລັງທັງໝົດຂອງພວກເຈົ້າໃຫ້ແກ່ເຮົາແບບໝົດຈິດໝົດໃຈຂອງພວກເຈົ້າ ແລະ ດ້ວຍສຸດຄວາມສາມາດຂອງພວກເຈົ້າ. ບໍ່ວ່າຈະເປັນມື້ນີ້ ຫຼື ມື້ອື່ນ, ບໍ່ວ່າເຈົ້າຈະເປັນຜູ້ທີ່ໃຫ້ບໍລິການແກ່ເຮົາ ຫຼື ເປັນຜູ້ທີ່ໄດ້ຮັບພອນ, ພວກເຈົ້າທັງໝົດຄວນອອກແຮງວັດກຳລັງຂອງພວກເຈົ້າເພື່ອລາຊະອານາຈັກຂອງເຮົາ. ນີ້ແມ່ນຂໍ້ມູກມັດທີ່ຜູ້ທີ່ຖືກສ້າງທັງໝົດຄວນຮັບເອົາ ແລະ ມັນຕ້ອງຖືກປະຕິບັດ ແລະ ຖືກຈັດຕັ້ງປະຕິບັດດ້ວຍວິທີນີ້. ເຮົາຈະກະຕຸ້ນໃຫ້ທຸກສິ່ງໃຫ້ບໍລິການເພື່ອເຮັດໃຫ້ຄວາມງົດງາມຂອງລາຊະອານາຈັກຂອງເຮົາໃໝ່ຕະຫຼອດໄປ ແລະ ເພື່ອເຮັດໃຫ້ເຮືອນຂອງເຮົານັ້ນມີຄວາມກົມກຽວ ແລະ ສາມັກຄີກັນ. ບໍ່ມີໃຜໄດ້ຮັບອະນຸຍາດໃຫ້ທ້າທາຍເຮົາ ແລະ ໃຜກໍຕາມທີ່ເຮັດເຊັ່ນນັ້ນຈະຕ້ອງປະສົບກັບການພິພາກສາ ແລະ ຖືກສາບແຊ່ງ. ປັດຈຸບັນນີ້ຄຳສາບແຊ່ງຂອງເຮົາເລີ່ມຕົກລົງສູ່ທຸກຊາດ ແລະ ທຸກຄົນ, ການສາບແຊ່ງຂອງເຮົານັ້ນຮ້າຍແຮງຍິ່ງກວ່າການພິພາກສາຂອງເຮົາອີກ. ຕອນນີ້ແມ່ນເວລາທີ່ຈະເລີ່ມລົງໂທດທຸກຄົນ, ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າເປັນຄຳສາບແຊ່ງ. ນີ້ກໍຍ້ອນວ່າ ປັດຈຸບັນນີ້ແມ່ນຍຸກສຸດທ້າຍ ແລະ ບໍ່ແມ່ນຍຸກແຫ່ງການຊົງສ້າງ. ເນື່ອງຈາກຍຸກສະໄໝຜັນປ່ຽນ, ຈັງຫວະຂອງພາລະກິດເຮົາຕອນນີ້ຈຶ່ງແຕກຕ່າງກັນຫຼາຍ. ເນື່ອງຈາກຄວາມຕ້ອງການຂອງພາລະກິດຂອງເຮົາ, ຄົນທີ່ເຮົາຕ້ອງການກໍແຕກຕ່າງກັນດ້ວຍ; ບັນດາຜູ້ທີ່ຄວນຖືກປະຖິ້ມຈະຖືກປະຖິ້ມ; ບັນດາຜູ້ທີ່ຄວນຖືກຕັດອອກຈະຖືກຕັດອອກ; ບັນດາຜູ້ທີ່ຄວນຖືກຂ້າຈະຖືກຂ້າ ແລະ ບັນດາຜູ້ທີ່ຄວນຖືກປະໄວ້ຈະຖືກປະໄວ້. ນີ້ເປັນແນວໂນ້ມທີ່ຫຼີກຫຼ່ຽງບໍ່ໄດ້ເຊິ່ງຂຶ້ນຢູ່ກັບຄວາມປະສົງຂອງມະນຸດ ແລະ ບໍ່ມີມະນຸດຄົນໃດຈະສາມາດປ່ຽນແປງມັນໄດ້. ມັນຕ້ອງສຳເລັດໄປຕາມຄວາມປະສົງຂອງເຮົາ! ເຮົາຈະປະຖິ້ມບັນດາຜູ້ທີ່ເຮົາຕ້ອງການປະຖິ້ມ ແລະ ກຳຈັດບັນດາຜູ້ທີ່ເຮົາຢາກກຳຈັດ; ບໍ່ມີໃຜຈະກະທຳໂດຍພາລະການ. ເຮົາປະບັນດາຜູ້ທີ່ເຮົາປາດຖະໜາຢາກປະໄວ້ ແລະ ເຮົາຮັກຜູ້ທີ່ເຮົາປາດຖະໜາທີ່ຈະຮັກ; ນີ້ຕ້ອງເປັນໄປຕາມຄວາມປະສົງຂອງເຮົາ! ເຮົາບໍ່ໄດ້ເຮັດຕາມອາລົມ;

ເຮົາມີພຽງຄວາມຊອບທຳ, ການພິພາກສາ ແລະ ຄວາມໂກດຮ້າຍ ໂດຍທີ່ບໍ່ມີອາລົມແມ່ນແຕ່ໜ້ອຍເລີຍ. ບໍ່ມີຮ່ອງຮອຍຈາງໆຂອງມະນຸດໃນຕົວເຮົາ ຍ້ອນວ່າເຮົາແມ່ນພຣະເຈົ້າ, ຕົວຕົນຂອງພຣະເຈົ້າ. ຍ້ອນວ່າຄົນທັງໝົດເຫັນແງ່ມຸມຂອງເຮົາເຊິ່ງແມ່ນຄວາມເປັນມະນຸດຂອງເຮົາ ແລະ ພວກເຂົາບໍ່ໄດ້ເຫັນແງ່ມຸມທີ່ເປັນຄວາມເປັນພຣະເປັນເຈົ້າຂອງເຮົາ. ແທ້ຈິງແລ້ວ ພວກເຂົາຕາບອດ ແລະ ສັບສົນ!

ພວກເຈົ້າຕ້ອງເກັບຮັກສາສິ່ງທີ່ເຮົາບອກພວກເຈົ້າໄວ້ໃນໃຈຂອງພວກເຈົ້າ, ພວກເຈົ້າຕ້ອງເຂົ້າໃຈຫົວໃຈຂອງເຮົາຜ່ານພຣະທຳຂອງເຮົາ ແລະ ສະແດງຄວາມເຫັນໃຈຕໍ່ພາລະຂອງເຮົາ. ເມື່ອນັ້ນພວກເຈົ້າຈຶ່ງຈະໄດ້ຮູ້ຈັກຄວາມຊົງລິດທານຸພາບສູງສຸດຂອງເຮົາ ແລະ ເຫັນຕົວຕົນຂອງເຮົາ. ເພາະວ່າພຣະທຳຂອງເຮົາແມ່ນພຣະທຳແຫ່ງສະຕິປັນຍາ ແລະ ບໍ່ມີໃຜສາມາດເຂົ້າໃຈຫຼັກການ ຫຼື ບົດບັນຍັດທີ່ຢູ່ເບື້ອງຫຼັງພຣະທຳຂອງເຮົາໄດ້. ຄົນຄິດວ່າເຮົາຝຶກຝົນການຫຼອກລວງ ແລະ ການຄົດໂກງ ແລະພວກເຂົາບໍ່ໄດ້ຮູ້ຈັກເຮົາຜ່ານພຣະທຳຂອງເຮົາ, ແຕ່ກົງກັນຂ້າມ, ພວກເຂົາກັບໝິ່ນປະໝາດເຮົາ. ພວກເຂົາຊ່າງຕາບອດ ແລະ ໂງ່ຈ້າແທ້ໆ! ພວກເຂົາຂາດແມ່ນແຕ່ການຢັ່ງຮູ້ທີ່ນ້ອຍທີ່ສຸດ. ທຸກປະໂຫຍກທີ່ເຮົາກ່າວມີສິດອຳນາດ ແລະ ການພິພາກສາ ແລະ ບໍ່ມີໃຜສາມາດປ່ຽນແປງພຣະທຳຂອງເຮົາໄດ້. ເມື່ອພຣະທຳຂອງເຮົາອອກມາ, ສິ່ງຕ່າງໆຈະສຳເລັດລົງຕາມພຣະທຳຂອງເຮົາຢ່າງແນ່ນອນ; ນີ້ແມ່ນອຸປະນິໄສຂອງເຮົາ. ພຣະທຳຂອງເຮົາແມ່ນສິດອຳນາດ ແລະ ຜູ້ໃດທີ່ແກ້ໄຂພຣະທຳເຫຼົ່ານັ້ນແມ່ນໄດ້ລ່ວງເກີນການຂ້ຽນຕີຂອງເຮົາ ແລະ ເຮົາຈະຕ້ອງລົງມືກັບພວກເຂົາ. ໃນກໍລະນີຮ້າຍແຮງ ພວກເຂົານຳເອົາການທຳລາຍມາສູ່ຊີວິດຂອງຕົນເອງ ແລະ ພວກເຂົາກໍ່ລົງສູ່ແດນມໍລະນາ ຫຼື ສູ່ຂຸມເລິກ. ນີ້ແມ່ນວິທີດຽວທີ່ເຮົາຈັດການກັບມວນມະນຸດ ແລະ ມະນຸດບໍ່ມີທາງທີ່ຈະປ່ຽນແປງມັນໄດ້ ເນື່ອງຈາກນີ້ແມ່ນພຣະດຳລັດແຫ່ງການປົກຄອງຂອງເຮົາ. ຈົ່ງຈື່ຈຳສິ່ງນີ້ໄວ້! ບໍ່ມີໃຜໄດ້ຮັບອະນຸຍາດໃຫ້ລ່ວງເກີນພຣະດຳລັດຂອງເຮົາ; ສິ່ງຕ່າງໆຕ້ອງເປັນໄປຕາມຄວາມປະສົງຂອງເຮົາ! ໃນອະດີດ, ເຮົາງ່າຍກັບພວກເຈົ້າຫຼາຍເກີນໄປ ແລະ ພວກເຈົ້າກໍຜະເຊີນແຕ່ກັບພຣະທຳຂອງເຮົາເທົ່ານັ້ນ. ພຣະທຳທີ່ເຮົາກ່າວກ່ຽວກັບການລົງມືກັບຄົນນັ້ນຍັງບໍ່ທັນໄດ້ເກີດຂຶ້ນເທື່ອ. ແຕ່ນັບຈາກມື້ນີ້ໄປ, ໄພພິບັດທັງໝົດ (ສິ່ງເຫຼົ່ານີ້ກ່ຽວຂ້ອງກັບພຣະດຳລັດແຫ່ງການປົກຄອງຂອງເຮົາ) ຈະມາຕາມໆກັນເພື່ອລົງໂທດທຸກຄົນທີ່ບໍ່ປະຕິບັດຕາມຄວາມປະສົງຂອງເຮົາ. ຈະຕ້ອງມີການມາເຖິງຂອງຄວາມຈິງ, ບໍ່ດັ່ງນັ້ນ ຄົນກໍຈະບໍ່ສາມາດເຫັນຄວາມໂກດຮ້າຍຂອງເຮົາ ແຕ່ຈະເຮັດໃຫ້ຕົວເອງເສື່ອມຊາມຊໍ້າແລ້ວຊໍ້າອີກ. ນີ້ແມ່ນຂັ້ນຕອນແຫ່ງແຜນການຄຸ້ມຄອງຂອງເຮົາ ແລະ ແມ່ນວິທີເຊິ່ງເຮົາປະຕິບັດຂັ້ນຕອນຕໍ່ໄປຂອງພາລະກິດເຮົາ. ເຮົາກ່າວແບບນີ້ກັບພວກເຈົ້າລ່ວງໜ້າເພື່ອວ່າພວກເຈົ້າຈະສາມາດຫຼີກຫຼ່ຽງການກະທຳຄວາມຜິດ ແລະການທົນທຸກກັບການລົງໂທດທີ່ບໍ່ມີທີ່ສິ້ນສຸດຕະຫຼອດໄປ. ໝາຍຄວາມວ່າ ນັບແຕ່ມື້ນີ້ໄປ, ເຮົາຈະເຮັດໃຫ້ທຸກຄົນໄດ້ຮັບບ່ອນທີ່ເໝາະສົມຂອງພວກເຂົາຕາມຄວາມປະສົງຂອງເຮົາ ແລະ ເຮົາຈະຂ້ຽນຕີພວກເຂົາເທື່ອລະຄົນ ຍົກເວັ້ນແຕ່ບຸດຊາຍກົກຂອງເຮົາ. ເຮົາຈະບໍ່ປ່ອຍໃຫ້ພວກເຂົາຫຼຸດລອດໄປແມ່ນແຕ່ຄົນດຽວ. ພວກເຈົ້າກ້າເສເພອີກແມ້! ເຈົ້າກ້າກະບົດອີກແມ້! ເຮົາເຄີຍກ່າວມາກ່ອນແລ້ວວ່າເຮົາຊອບທຳກັບທຸກຄົນ, ວ່າເຮົາບໍ່ມີເສດສ້ຽວຄວາມຮູ້ສຶກ ແລະ ນີ້ສະແດງໃຫ້ເຫັນວ່າອຸປະນິໄສຂອງເຮົາ

ຕ້ອງບໍ່ຖືກລ່ວງເກີນ. ນີ້ແມ່ນຕົວຕົນຂອງເຮົາ. ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້. ທຸກຄົນໄດ້ຍິນພຣະທຳຂອງເຮົາ ແລະ ທຸກຄົນເຫັນໃສມໜ້າທີ່ມີລັດສະໝີຂອງເຮົາ. ທຸກຄົນຕ້ອງເຊື່ອຟັງເຮົາຢ່າງຄົບຖ້ວນ ແລະ ຢ່າງແນ່ນອນ. ນີ້ແມ່ນພຣະດຳລັດແຫ່ງການປົກຄອງຂອງເຮົາ. ທຸກຄົນທົ່ວຈັກກະວານ ແລະ ຈົນສຸດແຜ່ນດິນໂລກຄວນສັນລະເສີນ ແລະ ເຊີດຊູເຮົາ ຍ້ອນວ່າເຮົາແມ່ນພຣະເຈົ້າທີ່ເປັນເອກະລັກ, ຍ້ອນວ່າເຮົາແມ່ນຕົວຕົນຂອງພຣະເຈົ້າ. ບໍ່ມີໃຜສາມາດປ່ຽນແປງພຣະທຳ ແລະ ຄຳເວົ້າຂອງເຮົາ, ຄຳປາໄສ ແລະ ທ່າທາງຂອງເຮົາໄດ້ ຍ້ອນວ່າສິ່ງເຫຼົ່ານີ້ແມ່ນເລື່ອງຂອງເຮົາຜູ້ດຽວ ແລະ ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຮົາໄດ້ມີມາແຕ່ສະໄໝບູຮານ ແລະ ຈະມີຢູ່ຕະຫຼອດໄປ.

ຄົນປິດບັງຄວາມຕັ້ງໃຈເພື່ອທົດສອບເຮົາ ແລະ ພວກເຂົາຕ້ອງການພົບບາງຢ່າງພາຍໃນພຣະທຳຂອງເຮົາເຊິ່ງພວກເຂົາສາມາດໃຊ້ຕໍ່ຕ້ານເຮົາ ເພື່ອໃສ່ຮ້າຍປ້າຍສີເຮົາ. ເຮົາຕ້ອງຖືກເຈົ້າໃສ່ຮ້າຍປ້າຍສີບໍ? ເຮົາຕ້ອງຖືກພິພາກສາແບບສະບາຍສະບາຍບໍ? ທຸລະຂອງເຮົາຕ້ອງຖືກສົນທະນາແບບສະບາຍສະບາຍບໍ? ພວກເຈົ້າເປັນພວກທີ່ບໍ່ຮູ້ວ່າແມ່ນຫຍັງດີສຳລັບພວກເຈົ້າແທ້ໆ! ພວກເຈົ້າບໍ່ຮູ້ຈັກເຮົາແມ່ນແຕ່ໜ້ອຍເລີຍ! ພູຊີໂອນແມ່ນຫຍັງ? ທີ່ພັກອາໄສຂອງເຮົາແມ່ນຫຍັງ? ດິນແດນທີ່ແສນດີຂອງການາອານແມ່ນຫຍັງ? ພື້ນຖານຂອງການຊົງສ້າງແມ່ນຫຍັງ? ເປັນຫຍັງໃນຊ່ວງສອງສາມວັນທີ່ຜ່ານມາເຮົາຈຶ່ງໄດ້ສືບຕໍ່ກ່າວເຖິງພຣະທຳເຫຼົ່ານີ້? ພູຊີໂອນ, ທີ່ພັກອາໄສຂອງເຮົາ, ດິນແດນທີ່ແສນດີຂອງການາອານ, ພື້ນຖານຂອງການຊົງສ້າງ; ທັງໝົດນີ້ໄດ້ຖືກກ່າວເຖິງກໍເພື່ອອ້າງອີງເຖິງຕົວຕົນຂອງເຮົາ (ອ້າງອີງເຖິງຮ່າງກາຍ). ຄົນທັງຫຼາຍຄິດວ່າສິ່ງເຫຼົ່ານີ້ແມ່ນສະຖານທີ່ທີ່ມີຢູ່ຈິງເປັນຮູບປະທຳ. ຕົວຕົນຂອງເຮົາແມ່ນພູຊີໂອນ; ມັນແມ່ນບ່ອນພັກພິງຂອງເຮົາ. ໃຜກໍຕາມທີ່ເຂົ້າສູ່ໂລກຝ່າຍວິນຍານຈະປີນພູຊີໂອນ ແລະ ຈະເຂົ້າສູ່ບ່ອນພັກພິງຂອງເຮົາ. ເຮົາສ້າງທຸກສິ່ງພາຍໃນຕົວເຮົາເອງ; ນັ້ນກໍຄື ທຸກສິ່ງໄດ້ຖືກສ້າງຂຶ້ນມາຢູ່ໃນຮ່າງກາຍ, ເພາະສະນັ້ນມັນຈຶ່ງເປັນພື້ນຖານ. ເປັນຫຍັງເຮົາຈຶ່ງກ່າວວ່າພວກເຈົ້າຈະກັບຄືນສູ່ຮ່າງກາຍພ້ອມກັນກັບເຮົາ? ມີຄວາມໝາຍດັ່ງເດີມຢູ່ໃນນັ້ນ. ຄືກັນກັບຊື່ "ພຣະເຈົ້າ", ນາມເຫຼົ່ານີ້ບໍ່ມີຄວາມໝາຍໃນຕົວຂອງມັນເອງ ແຕ່ກົງກັນຂ້າມ ແມ່ນຊື່ທີ່ແຕກຕ່າງທີ່ເຮົາຕັ້ງໃຫ້ສະຖານທີ່ຕ່າງໆ. ດັ່ງນັ້ນ ຢ່າໃສ່ໃຈກັບຄວາມໝາຍຕາມຕົວອັກສອນຂອງພວກມັນຫຼາຍເກີນໄປ ແຕ່ຈົ່ງສຸມໃສ່ການໄດ້ຍິນພຣະທຳຂອງເຮົາເທົ່ານັ້ນ. ເຈົ້າຕ້ອງເຫັນພວກມັນໃນທາງນີ້ ແລະ ຫຼັງຈາກນັ້ນເຈົ້າຈະສາມາດເຂົ້າໃຈຄວາມປະສົງຂອງເຮົາໄດ້. ເປັນຫຍັງເຮົາຈຶ່ງເຕືອນຄວາມຈຳພວກເຈົ້າຊ້ຳໆວ່າໃຫ້ມີສະຕິປັນຍາຢູ່ໃນພຣະທຳຂອງເຮົາ? ມີຈັກຄົນໃນບັນດາພວກເຈົ້າທີ່ໄດ້ພະຍາຍາມຫາຄວາມໝາຍທີ່ຢູ່ເບື້ອງຫຼັງເລື່ອງນີ້? ພວກເຈົ້າທຸກຄົນກຳລັງວິເຄາະແບບສຸ່ມສີ່ສຸ່ມຫ້າ ແລະ ບໍ່ສົມເຫດສົມຜົນ!

ຕອນນີ້ພວກເຈົ້າກໍຍັງບໍ່ເຂົ້າໃຈໃນສິ່ງຕ່າງໆເປັນສ່ວນໃຫຍ່ທີ່ເຮົາໄດ້ກ່າວໃນອະດີດ. ພວກເຈົ້າຢູ່ໃນສະຖານະຂອງຄວາມສົງໄສ ແລະ ບໍ່ສາມາດເຮັດໃຫ້ເຮົາພໍໃຈໄດ້. ໃນເວລາໃດກໍຕາມທີ່ເຈົ້າສາມາດແນ່ໃຈກ່ຽວກັບທຸກໆປະໂຫຍກທີ່ເຮົາກ່າວ, ນັ້ນຈະແມ່ນເວລາທີ່ຊີວິດຂອງພວກເຈົ້າຈະເລີນເຕີບໂຕ. ສຳລັບເຮົາແລ້ວ, ມື້ໜຶ່ງເປັນຄືກັບພັນປີ ແລະ ພັນປີເປັນຄືກັບມື້ໜຶ່ງ; ພວກເຈົ້າຄິດແນວໃດຕໍ່ເວລາທີ່ເຮົາກ່າວເຖິງ? ພວກເຈົ້າຈະອະທິບາຍມັນແນວໃດ? ພວກເຈົ້າຕີຄວາມໝາຍມັນຜິດໄປ!

ຍິ່ງໄປກວ່ານັ້ນ, ຄົນສ່ວນໃຫຍ່ອີກກະທຶກກ່ຽວກັບເລື່ອງນີ້ກັບເຮົາ ໂດຍປາດຖະໜາທີ່ຈະພົບບາງສິ່ງເພື່ອໃຊ້ຕໍ່ຕ້ານເຮົາ; ພວກເຈົ້າບໍ່ຮູ້ວ່າແມ່ນຫຍັງດີສຳລັບພວກເຈົ້າ! ຈົ່ງລະວັງ, ບໍ່ດັ່ງນັ້ນເຮົາຈະລົງມືກັບພວກເຈົ້າ! ເມື່ອວັນທີ່ທຸກສິ່ງຖືກເຮັດໃຫ້ຊັດເຈນມາຮອດ, ພວກເຈົ້າຈະເຂົ້າໃຈຢ່າງຄົບຖ້ວນ. ຕອນນີ້ເຮົາຍັງບໍ່ບອກພວກເຈົ້າເທື່ອ (ຕອນນີ້ແມ່ນເວລາເປີດໂປງຄົນ; ທຸກຄົນຕ້ອງຮອບຄອບ ແລະ ລະມັດລະວັງເພື່ອໃຫ້ສາມາດເຮັດຕາມຄວາມປະສົງຂອງເຮົາໄດ້). ເຮົາຈະເປີດໂປງທຸກຄົນຜ່ານພຣະທຳຂອງເຮົາ ແລະ ຮູບແບບເດີມຂອງພວກເຂົາຈະຖືກເປີດເຜີຍເພື່ອສະແດງໃຫ້ເຫັນວ່າພວກມັນຂອງແທ້ ຫຼື ບໍ່. ຖ້າບາງຄົນເປັນໂສເພນີ ຫຼື ຍິງຊົ່ວຮ້າຍ, ເຮົາກໍຕ້ອງເປີດໂປງພວກເຂົາ. ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ແລ້ວວ່າ ເຮົາກະທຳສິ່ງຕ່າງໆໂດຍບໍ່ໄດ້ຕິງນິ້ວມືແມ່ນແຕ່ນິ້ວດຽວ ແລະ ເຮົາໃຊ້ພຽງພຣະທຳຂອງເຮົາເພື່ອເປີດໂປງຄົນ. ເຮົາບໍ່ຢ້ານການປອມຕົວ; ເມື່ອພຣະທຳຂອງເຮົາຖືກກ່າວອອກມາ, ເຈົ້າຕ້ອງເປີດເຜີຍຮູບແບບເດີມຂອງເຈົ້າ ແລະ ບໍ່ວ່າເຈົ້າຈະປອມຕົວມາດີປານໃດກໍຕາມ ເຮົາກໍຈະເບິ່ງຊອດມັນໄດ້ຢ່າງແນ່ນອນ. ນີ້ແມ່ນຫຼັກການຂອງການກະທຳຂອງເຮົາ ໂດຍໃຊ້ພຽງແຕ່ຄຳເວົ້າ ແລະ ບໍ່ໄດ້ໃຊ້ພາລະກຳລັງແຕ່ຢ່າງໃດເລີຍ. ຄົນເປັນປະສາດຫຼາຍວ່າພຣະທຳຂອງເຮົາຈະຖືກຕື່ມເຕັມ ຫຼື ບໍ່ ແລະ ພວກເຂົາກັງວົນໃຈເພື່ອເຮົາ ແລະ ເປັນຫ່ວງເຮົາ ແຕ່ຄວາມພະຍາຍາມເຫຼົ່ານີ້ບໍ່ຈຳເປັນແທ້ໆ; ພວກເຂົາແມ່ນລາຄາທີ່ບໍ່ຈຳເປັນຕ້ອງຈ່າຍ. ເຈົ້າເປັນຫ່ວງເຮົາ ແຕ່ວ່າຊີວິດຂອງເຈົ້າເອງນັ້ນເຕີບໃຫຍ່ແລ້ວບໍ? ຊະຕາກຳຂອງຕົວເຈົ້າເອງເດເປັນແນວໃດ? ຈົ່ງຖາມຕົວເຈົ້າເອງເລື້ອຍໆ ແລະ ຢ່າເລີນເລີ້. ທຸກຄົນຄວນເອົາພາລະກິດຂອງເຮົາໄປພິຈາລະນາ ແລະ ເຫັນຕົວຕົນຂອງເຮົາ, ມີຄວາມຮູ້ຫຼາຍຂຶ້ນກ່ຽວກັບເຮົາ, ຮູ້ຈັກລິດທານຸພາບສູງສຸດຂອງເຮົາ, ຮູ້ຈັກສະຕິປັນຍາຂອງເຮົາ, ຮູ້ຈັກເຄື່ອງມື ແລະ ວິທີການທີ່ເຮົາສ້າງທຸກສິ່ງຜ່ານການກະທຳ ແລະ ພຣະທຳຂອງເຮົາ ເຊິ່ງດ້ວຍເຫດນັ້ນຈຶ່ງເປັນການສັນລະເສີນເຮົາໂດຍທີ່ບໍ່ມີສິ້ນສຸດ. ເຮົາຈະເຮັດໃຫ້ທຸກຄົນເຫັນວ່າເຮົາວາງມືແຫ່ງພຣະດຳລັດແຫ່ງການປົກຄອງຂອງເຮົາໃສ່ໃຜ, ເຮົາປະຕິບັດພາລະກິດໃນຕົວໃຜ, ສິ່ງທີ່ເຮົາຢາກກະທຳ ແລະ ສິ່ງທີ່ເຮົາຢາກເຮັດໃຫ້ສຳເລັດ. ນີ້ແມ່ນບາງສິ່ງທີ່ທຸກໆຄົນຕ້ອງບັນລຸ ຍ້ອນວ່ານີ້ແມ່ນພຣະດຳລັດແຫ່ງການປົກຄອງຂອງເຮົາ. ເຮົາຈະເຮັດສິ່ງທີ່ເຮົາກ່າວໃຫ້ສຳເລັດ. ບໍ່ມີໃຜຄວນວິເຄາະພຣະທຳຂອງເຮົາແບບສະບາຍໆ; ທຸກຄົນຕ້ອງເຫັນຫຼັກການທີ່ຢູ່ເບື້ອງຫຼັງການກະທຳຂອງເຮົາຜ່ານພຣະທຳຂອງເຮົາ ແລະ ຈາກພຣະທຳຂອງເຮົາກໍຮູ້ວ່າແມ່ນຫຍັງຄືຄວາມໂກດຮ້າຍຂອງເຮົາ, ແມ່ນຫຍັງຄືຄຳສາບແຊ່ງຂອງເຮົາ ແລະ ແມ່ນຫຍັງຄືການພິພາກສາຂອງເຮົາ. ສິ່ງທັງໝົດເຫຼົ່ານີ້ຂຶ້ນຢູ່ກັບພຣະທຳຂອງເຮົາ ແລະ ແມ່ນສິ່ງທີ່ຄວນຖືກເຫັນໂດຍທຸກຄົນພາຍໃນພຣະທຳທຸກຂໍ້ຂອງເຮົາ.

# ບົດທີ 101

ເຮົາຈະບໍ່ຜ່ອນຜັນແມ່ນແຕ່ໜ້ອຍດຽວຕໍ່ຜູ້ໃດກໍຕາມທີ່ຂັດຂວາງການຄຸ້ມຄອງຂອງເຮົາ ແລະ ຜູ້ທີ່ສະແຫວງຫາເພື່ອທໍາລາຍແຜນການຂອງເຮົາ. ທຸກຄົນຄວນເຂົ້າໃຈຄວາມໝາຍຂອງເຮົາຈາກພຣະທໍາທີ່ເຮົາກ່າວອອກມາ ແລະ ຄວນມີຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບສິ່ງທີ່ເຮົາກໍາລັງເວົ້າເຖິງ. ຍ້ອນສະຖານະການໃນປັດຈຸບັນ, ພວກເຈົ້າແຕ່ລະຄົນຄວນກວດສອບຕົນເອງ: ເຈົ້າກໍາລັງເຮັດບົດບາດຫຍັງ? ເຈົ້າກໍາລັງມີຊີວິດຢູ່ເພື່ອເຮົາ ຫຼື ເຈົ້າກໍາລັງຮັບໃຊ້ຊາຕານ? ການກະທໍາທຸກຢ່າງຂອງເຈົ້າອອກມາຈາກເຮົາ ຫຼື ມາຈາກມານຮ້າຍ? ເຈົ້າຄວນຊັດເຈນກ່ຽວກັບທຸກສິ່ງນີ້ ເພື່ອຫຼີກເວັ້ນບໍ່ໃຫ້ເຮັດຜິດຕໍ່ກົດບັນຍັດແຫ່ງການບໍລິຫານຂອງເຮົາ ແລະ ດ້ວຍເຫດນັ້ນ ກໍເຮັດໃຫ້ເຮົາເກີດມີຄວາມໃຈຮ້າຍຢ່າງຮຸນແຮງ. ເມື່ອຫວນຄິດຄືນຫາອະດີດ, ຜູ້ຄົນບໍ່ຊື່ສັດ ແລະ ອະກະຕັນຍູຕໍ່ເຮົາຢູ່ສະເໝີ; ພວກເຂົາບໍ່ເຄົາລົບນັບຖື ແລະ ຍິ່ງໄປກວ່ານັ້ນ ພວກເຂົາໄດ້ທໍລະຍົດເຮົາ. ຍ້ອນເຫດຜົນເຫຼົ່ານີ້ ຜູ້ຄົນເຫຼົ່ານີ້ຈຶ່ງຜະເຊີນກັບການພິພາກສາຂອງເຮົາໃນມື້ນີ້. ເຖິງແມ່ນວ່າເຮົາປາກົດວ່າເປັນພຽງມະນຸດ, ທຸກຄົນທີ່ເຮົາບໍ່ຮອງຮັບ (ເຈົ້າຄວນເຂົ້າໃຈຄວາມໝາຍຂອງເຮົາຈາກສິ່ງນີ້: ມັນບໍ່ໄດ້ກ່ຽວກັບວ່າເຈົ້າສວຍງາມສໍ່າໃດ ຫຼື ເຈົ້າມີສະເໜ່ສໍ່າໃດ, ແຕ່ມັນກ່ຽວກັບວ່າເຮົາໄດ້ກໍານົດໄວ້ລ່ວງໜ້າ ແລະ ຄັດເລືອກເອົາເຈົ້າ ຫຼື ບໍ່) ຈະຖືກເຮົາໂຍນອອກ. ສິ່ງນີ້ເປັນຈິງຢ່າງແນ່ນອນ. ນີ້ກໍຍ້ອນເຮົາອາດຈະປາກົດວ່າເປັນມະນຸດໃນພາຍນອກ, ແຕ່ເຈົ້າຕ້ອງເບິ່ງຜ່ານຄວາມເປັນມະນຸດຂອງເຮົາເພື່ອຮັບເອົາຄວາມເປັນພຣະເຈົ້າຂອງເຮົາ. ດັ່ງທີ່ເຮົາໄດ້ກ່າວຫຼາຍຄັ້ງວ່າ "ຄວາມເປັນມະນຸດທີ່ທໍາມະດາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນແມ່ນສອງສ່ວນຂອງພຣະເຈົ້າທີ່ສົມບູນແບບຢ່າງບໍ່ສາມາດແຍກອອກຈາກກັນໄດ້". ເຖິງຢ່າງໃດກໍຕາມພວກເຈົ້າກໍຍັງບໍ່ເຂົ້າໃຈເຮົາ; ພວກເຈົ້າພຽງແຕ່ໃຫ້ຄວາມສໍາຄັນກັບພຣະເຈົ້າທີ່ເລື່ອນລອຍຂອງເຈົ້າເທົ່ານັ້ນ. ພວກເຈົ້າເປັນຄົນທີ່ບໍ່ເຂົ້າໃຈເລື່ອງຝ່າຍວິນຍານ. ແຕ່ເຖິງຢ່າງນັ້ນກໍຕາມ ຜູ້ຄົນດັ່ງກ່າວກໍຍັງປາຖະໜາທີ່ຈະເປັນລູກຊາຍກົກຂອງເຮົາ. ຊ່າງໄຮ້ຢາງອາຍແທ້ໆ! ພວກເຂົາບໍ່ເຫັນວ່າ ສະຖານະຂອງພວກເຂົາເອງນັ້ນແມ່ນຫຍັງກັນແທ້! ພວກເຂົາເຖິງກັບບໍ່ມີສະຖານະທີ່ຈະຮັບໃຊ້ເປັນປະຊາຊົນຂອງເຮົາ ແລ້ວພວກເຂົາຈະເປັນລູກຊາຍກົກຂອງເຮົາ ແລະ ເປັນກະສັດຄຽງຂ້າງເຮົາໄດ້ແນວໃດ? ຜູ້ຄົນດັ່ງກ່າວບໍ່ຮູ້ຈັກຕົນເອງ; ພວກເຂົາເປັນພັກພວກຂອງຊາຕານ ແລະ ບໍ່ເໝາະສົມທີ່ຈະເປັນເສົາໃນຄົວເຮືອນຂອງເຮົາ, ແຮງໄກທີ່ຈະຮັບໃຊ້ຕໍ່ໜ້າເຮົາ. ສະນັ້ນ ເຮົາຈຶ່ງຈະກໍາຈັດພວກເຂົາເທື່ອລະຄົນ ແລະ ເຮົາຈະເປີດເຜີຍໃບໜ້າທີ່ແທ້ຈິງຂອງພວກເຂົາເທື່ອລະຄົນ.

ພາລະກິດຂອງເຮົາດໍາເນີນໄປເທື່ອລະບາດກ້າວ ໂດຍບໍ່ມີຫຍັງຂັດຂວາງ ແລະ ໂດຍບໍ່ມີອຸປະສັກແມ່ນແຕ່ໜ້ອຍດຽວ, ເພາະເຮົາໄດ້ຮັບເອົາໄຊຊະນະ ແລະ ຍ້ອນເຮົາໄດ້ປົກຄອງດັ່ງກະສັດທົ່ວຈັກກະວານທັງປວງ. (ສິ່ງທີ່ເຮົາກໍາລັງໝາຍເຖິງກໍຄື ນັບຕັ້ງແຕ່ໄດ້ເອົາຊະນະຊາຕານທີ່ຊົ່ວຮ້າຍ ເຮົາກໍໄດ້ຟື້ນຟູອໍານາດຂອງເຮົາຄືນໃໝ່). ເມື່ອເຮົາໄດ້ຮັບລູກຊາຍກົກທັງໝົດ, ທຸງແຫ່ງໄຊຊະນະກໍຈະປາກົດຂຶ້ນເທິງພູຊີໂອນ. ນັ້ນໝາຍຄວາມວ່າ ລູກຊາຍກົກຂອງເຮົາຄືທຸງແຫ່ງໄຊຊະນະຂອງເຮົາ, ຄືສະຫງ່າລາສີຂອງ

ເຮົາ ແລະ ສິ່ງທີ່ເຮົາໂອ້ອວດ; ພວກມັນເປັນສັນຍານວ່າ ເຮົາໄດ້ເຮັດໃຫ້ຊາຕານຂາຍໜ້າ ແລະ ພວກມັນເປັນວິທີການທີ່ເຮົາປະຕິບັດພາລະກິດ. (ຜ່ານກຸ່ມຄົນທີ່ຖືກເຮັດໃຫ້ເສື່ອມຊາມໂດຍຊາຕານ ຫຼັງຈາກທີ່ເຮົາໄດ້ກຳນົດພວກເຂົາໄວ້ລ່ວງໜ້າ, ແຕ່ຜູ້ທີ່ກັບຄືນມາຢູ່ຄຽງຂ້າງເຮົາອີກຄັ້ງ, ເຮົາໄດ້ເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ອັບອາຍ ແລະ ປົກຄອງເໜືອລູກຊາຍແຫ່ງຄວາມກະບົດທັງໝົດ). ລູກຊາຍກົກຂອງເຮົາແມ່ນບ່ອນທີ່ລິດທານຸພາບສູງສຸດຂອງເຮົາສະຖິດຢູ່; ພວກເຂົາແມ່ນຄວາມສຳເລັດອັນຍິ່ງໃຫຍ່ຂອງເຮົາ ເຊິ່ງບໍ່ສາມາດປ່ຽນແປງໄດ້ ແລະ ບໍ່ສາມາດໂຕ້ແຍ້ງໄດ້. ມັນແມ່ນຜ່ານພວກເຂົາທີ່ເຮົາຈະເຮັດໃຫ້ແຜນການຄຸ້ມຄອງຂອງເຮົາສຳເລັດລົງ. ນີ້ແມ່ນສິ່ງທີ່ເຮົາໝາຍເຖິງໃນອະດີດ ເມື່ອເຮົາເວົ້າວ່າ "ມັນແມ່ນຜ່ານພວກເຈົ້າ ທີ່ເຮົາຈະເຮັດໃຫ້ທຸກຊົນຊາດ ແລະ ທຸກຄົນກັບຄືນມາຢູ່ຕໍ່ໜ້າບັນລັງຂອງເຮົາ". ມັນຍັງເປັນສິ່ງທີ່ເຮົາກຳລັງໝາຍເຖິງ ເມື່ອເຮົາເວົ້າຄຳວ່າ "ພາລະອັນໜັກໜ່ວງທີ່ຢູ່ເທິງບ່າໄຫຼ່ຂອງພວກເຈົ້າ". ສິ່ງນັ້ນຊັດເຈນບໍ? ເຈົ້າເຂົ້າໃຈບໍ? ລູກຊາຍກົກແມ່ນແກ້ວຜະລຶກແຫ່ງແຜນການຄຸ້ມຄອງທັງໝົດຂອງເຮົາ; ດ້ວຍເຫດນີ້ ເຮົາຈຶ່ງບໍ່ເຄີຍປະຕິບັດຕໍ່ກຸ່ມນີ້ຢ່າງອ່ອນໂຍນ ແລະ ເຮົາໄດ້ລົງວິໄນພວກເຂົາຢ່າງຮຸນແຮງຢູ່ສະເໝີ (ວິໄນທີ່ຮຸນແຮງນັ້ນແມ່ນຄວາມທຸກຍາກທີ່ໄດ້ທົນທຸກໃນໂລກ, ຄວາມໂຊກຮ້າຍຂອງຄອບຄົວ ແລະ ການຖືກພໍ່ແມ່, ຜົວ, ເມຍ ແລະ ລູກໆປະຖິ້ມ, ສະຫຼຸບກໍຄືການຖືກໂລກປະຖິ້ມ ແລະ ການຖືກຍຸກດັ່ງກ່າວປະຖິ້ມ) ແລະ ນີ້ຄືເຫດຜົນທີ່ເຈົ້າໂຊກດີທີ່ໄດ້ມາຢູ່ຕໍ່ໜ້າເຮົາໃນມື້ນີ້. ນີ້ແມ່ນຄຳຕອບສຳລັບຄຳຖາມທີ່ພວກເຈົ້າໄດ້ໄຕ່ຕອງຢູ່ເລື້ອຍໆ: "ເປັນຫຍັງຜູ້ຄົນຈຶ່ງບໍ່ຍອມຮັບເອົານາມນີ້, ແຕ່ເຮົາຈຶ່ງຍອມຮັບ?" ບັດນີ້ ເຈົ້າກໍຮູ້ແລ້ວ!

ມື້ນີ້ ບໍ່ມີສິ່ງໃດເປັນຄືດັ່ງໃນອະດີດ. ແຜນການຄຸ້ມຄອງຂອງເຮົາໄດ້ນຳໃຊ້ວິທີການໃໝ່, ພາລະກິດຂອງເຮົາຍິ່ງແຕກຕ່າງກວ່າທີ່ມັນເຄີຍເປັນ ແລະ ບັດນີ້ ພຣະຄຳຂອງເຮົາກໍຍິ່ງເປັນສິ່ງທີ່ບໍ່ເຄີຍມີມາກ່ອນ. ສະນັ້ນ ເຮົາຈຶ່ງໄດ້ເນັ້ນຊໍ້າແລ້ວຊໍ້າອີກວ່າ ພວກເຈົ້າຄວນໃຫ້ບໍລິການແກ່ເຮົາຢ່າງຖືກຕ້ອງ (ສິ່ງນີ້ແມ່ນເວົ້າກັບຜູ້ໃຫ້ບໍລິການ). ຢ່າປະຕິບັດຕໍ່ຕົນເອງໃນທາງລົບ, ແຕ່ໃຫ້ຮັກສາການສະແຫວງຫາຢ່າງຈິງຈັງ. ມັນບໍ່ສຳລານໃຈບໍທີ່ຈະຮັບເອົາຄວາມກະລຸນາບາງຢ່າງ? ມັນດີກວ່າທີ່ຈະທົນທຸກໃນໂລກຫຼາຍ. ເຮົາຂໍບອກເຈົ້າ! ຖ້າເຈົ້າບໍ່ໃຫ້ບໍລິການແກ່ເຮົາຢ່າງສຸດໃຈ ແລະ ກົງກັນຂ້າມ ເຈົ້າຕຳນິເຮົາວ່າບໍ່ຊອບທຳ, ແລ້ວມື້ອື່ນ ເຈົ້າຈະລົງສູ່ດິນແດນມໍລະນາ ແລະ ນະຣົກ. ບໍ່ມີຜູ້ໃດຕ້ອງການຕາຍໄວກ່ອນກຳນົດ, ມັນບໍ່ແມ່ນແບບນັ້ນບໍ? ເຖິງແມ່ນມີອີກມື້ໜຶ່ງໃນຊີວິດກໍເປັນມື້ທີ່ມີຄວາມໝາຍ, ສະນັ້ນ ເຈົ້າຄວນອຸທິດຕົນເອງທັງໝົດໃຫ້ແກ່ແຜນການຄຸ້ມຄອງຂອງເຮົາ ແລະ ຫຼັງຈາກນັ້ນກໍໃຫ້ລໍຖ້າເຮົາພິພາກສາເຈົ້າ ແລະ ລໍຖ້າໃຫ້ການຂ້ຽນຕີອັນຊອບທຳຂອງເຮົາເກີດຂຶ້ນກັບເຈົ້າ. ຢ່າສັນນິຖານວ່າ ສິ່ງທີ່ເຮົາກຳລັງເວົ້າເປັນສິ່ງທີ່ໄຮ້ສາລະ; ເຮົາເວົ້າຈາກຄວາມຊອບທຳຂອງເຮົາ ແລະ ຈາກອຸປະນິໄສຂອງເຮົາ. ຍິ່ງໄປກວ່ານັ້ນ ເຮົາປະຕິບັດດ້ວຍຄວາມສະຫງ່າຜ່າເຜີຍ ແລະ ຄວາມຊອບທຳຂອງເຮົາ. ການທີ່ທຸກຄົນເວົ້າວ່າ ເຮົາບໍ່ຊອບທຳ ກໍເປັນຍ້ອນພວກເຂົາບໍ່ຮູ້ຈັກເຮົາ; ນີ້ແມ່ນການສະແດງອອກຢ່າງຊັດເຈນເຖິງອຸປະນິໄສທີ່ກະບົດຂອງພວກເຂົາ. ແຕ່ສຳລັບເຮົາແມ່ນບໍ່ມີຄວາມຮູ້ສຶກ; ກົງກັນຂ້າມແມ່ນມີພຽງແຕ່ຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ, ການພິພາກສາ ແລະ ຄວາມໂກດຮ້າຍເທົ່ານັ້ນ. ຍິ່ງເວລາຜ່ານໄປ,

ເຈົ້າກໍຍິ່ງຈະໄດ້ເຫັນອຸປະນິໄສຂອງເຮົາ. ປັດຈຸບັນແມ່ນຂັ້ນຕອນການປ່ຽນແປງ ແລະ ພວກເຈົ້າສາມາດເຫັນພຽງແຕ່ສ່ວນເລັກນ້ອຍໃນສິ່ງນີ້; ພວກເຈົ້າພຽງແຕ່ສາມາດເຫັນສິ່ງທີ່ຖືກສະແດງອອກທາງພາຍນອກບາງສ່ວນເທົ່ານັ້ນ. ເມື່ອລູກຊາຍກົກຂອງເຮົາປາກົດຂຶ້ນ, ເຮົາຈະອະນຸຍາດໃຫ້ພວກເຈົ້າເຫັນທຸກສິ່ງ ແລະ ເຂົ້າໃຈມັນໝົດທຸກຢ່າງ. ທຸກຄົນຈະເຊື່ອດ້ວຍຫົວໃຈຂອງພວກເຂົາ ແລະ ດ້ວຍຄຳເວົ້າຂອງພວກເຂົາ. ເຮົາຈະເຮັດໃຫ້ພວກເຈົ້າເວົ້າອອກມາເພື່ອເປັນພະຍານໃຫ້ແກ່ເຮົາ, ສັນລະເສີນເຮົາຕະຫຼອດໄປ ແລະ ຍົກຍ້ອງເຮົາຕະຫຼອດໄປ. ສິ່ງນີ້ແມ່ນຫຼີກເວັ້ນບໍ່ໄດ້ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງໄດ້. ຜູ້ຄົນບໍ່ສາມາດຈິນຕະນາການມັນໄດ້, ແຮງໄກທີ່ພວກເຂົາຈະເຊື່ອມັນ.

ຄົນທີ່ເປັນລູກຊາຍກົກມີຄວາມຊັດເຈນເພີ່ມຂຶ້ນເລື້ອຍໆກ່ຽວກັບນິມິດ ແລະ ຄວາມຮັກຂອງພວກເຂົາສຳລັບເຮົາກໍເຕີບໂຕຂຶ້ນເລື້ອຍໆ. (ນີ້ບໍ່ແມ່ນຄວາມຮັກແບບບ່າວສາວ ແຕ່ເປັນການລໍ້ລວງຂອງຊາຕານຕໍ່ເຮົາ ແລະ ເປັນສິ່ງທີ່ຕ້ອງເບິ່ງຢ່າງລະອຽດ. ດ້ວຍເຫດນີ້ ເຮົາຈຶ່ງກ່າວໄວ້ກ່ອນໜ້ານີ້ວ່າມີຄົນທີ່ໂອ້ອວດສະເໜ່ຂອງພວກເຂົາຕໍ່ໜ້າເຮົາ. ຜູ້ຄົນດັ່ງກ່າວເປັນລູກນ້ອງຂອງຊາຕານທີ່ເຊື່ອວ່າເຮົາຈະຖືກດຶງດູດດ້ວຍຮູບລັກສະນະຂອງພວກເຂົາ. ຊ່າງໄຮ້ຢາງອາຍແທ້ໆ! ພວກເຂົາເປັນຄົນຕໍ່າຊ້າທີ່ຊົ່ວຊ້າທີ່ສຸດ!) ເຖິງຢ່າງໃດກໍຕາມ ຜ່ານພຣະທຳເຫຼົ່ານີ້ທີ່ເຮົາໄດ້ກ່າວຕະຫຼອດເວລາ, ຜູ້ຄົນທີ່ບໍ່ແມ່ນລູກຊາຍກົກເອງກໍເລີ່ມບໍ່ຊັດເຈນຂຶ້ນເລື້ອຍໆກ່ຽວກັບນິມິດ ແລະ ໄດ້ສູນເສຍຄວາມເຊື່ອໃນບຸກຄົນທີ່ເຮົາເປັນ. ຕັ້ງແຕ່ນັ້ນເປັນຕົ້ນມາ ພວກເຂົາກໍເລີ່ມເສີຍເມີຍຂຶ້ນເລື້ອຍໆ ຈົນໃນທີ່ສຸດພວກເຂົາກໍລົ້ມລົງ. ຜູ້ຄົນດັ່ງກ່າວບໍ່ສາມາດຊ່ວຍເຫຼືອຕົນເອງໄດ້. ນັ້ນແມ່ນເປົ້າໝາຍຂອງສິ່ງທີ່ເຮົາກຳລັງເວົ້າໃນລະຫວ່າງຊ່ວງເວລານີ້; ທຸກຄົນຄວນເຫັນສິ່ງນີ້ (ເຮົາກຳລັງເວົ້າຕໍ່ລູກຊາຍກົກ) ແລະ ຜ່ານພຣະຄຳ ແລະ ການກະທຳຂອງເຮົາ ໃຫ້ເບິ່ງຄວາມອັດສະຈັນຂອງເຮົາ. ເປັນຫຍັງຈຶ່ງເວົ້າວ່າ ເຮົາເປັນເຈົ້າຊາຍແຫ່ງສັນຕິພາບ, ເປັນພຣະບິດາຊົ່ວນິດນິລັນ, ເຮົາເປັນຜູ້ອັດສະຈັນ ແລະ ເຮົາເປັນທີ່ປຶກສາ? ການອະທິບາຍສິ່ງນີ້ຈາກທັດສະນະແຫ່ງຕົວຕົນຂອງເຮົາ, ພຣະຄຳຂອງເຮົາ ຫຼື ຈາກສິ່ງທີ່ເຮົາເຮັດກໍຈະຜິວເຜີນເກີນໄປ; ມັນບໍ່ມີຄ່າໃຫ້ກ່າວເຖິງເລີຍ. ເຫດຜົນທີ່ເອີ້ນເຮົາວ່າເຈົ້າຊາຍແຫ່ງສັນຕິພາບແມ່ນມາຈາກອຳນາດຂອງເຮົາທີ່ຈະເຮັດໃຫ້ລູກຊາຍກົກ, ການທີ່ເຮົາພິພາກສາຊາຕານ ແລະ ພອນອັນບໍ່ສິ້ນສຸດທີ່ເຮົາໄດ້ປະທານໃຫ້ແກ່ລູກຊາຍກົກນັ້ນສົມບູນ. ເວົ້າອີກຢ່າງໜຶ່ງກໍຄື ມີພຽງແຕ່ລູກຊາຍກົກເທົ່ານັ້ນທີ່ມີຄຸນສົມບັດເອີ້ນເຮົາວ່າ ເຈົ້າຊາຍແຫ່ງສັນຕິພາບ ຍ້ອນເຮົາຮັກລູກຊາຍກົກຂອງເຮົາ ແລະ ສາຍາ "ເຈົ້າຊາຍແຫ່ງສັນຕິພາບ" ກໍຄວນມາຈາກປາກຂອງພວກເຂົາ. ສຳລັບພວກເຂົາແລ້ວ ເຮົາເປັນເຈົ້າຊາຍແຫ່ງສັນຕິພາບ. ສຳລັບລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາ, ເຮົາເປັນທີ່ຮູ້ຈັກໃນນາມພຣະບິດາຊົ່ວນິດນິລັນ. ເນື່ອງຈາກການເປັນຢູ່ຂອງລູກຊາຍກົກຂອງເຮົາ ແລະ ຍ້ອນພວກເຂົາສາມາດມີອຳນາດຂອງກະສັດຮ່ວມກັນກັບເຮົາ ແລະ ປົກຄອງເໜືອທຸກຊົນຊາດ ແລະ ທຸກຄົນ (ນັ້ນກໍຄື ລູກຊາຍ ແລະ ປະຊາຊົນ), ສະນັ້ນ ລູກຊາຍ ແລະ ປະຊາຊົນກໍຄວນເອີ້ນເຮົາວ່າ ພຣະບິດາຊົ່ວນິດນິລັນ ເຊິ່ງໝາຍເຖິງພຣະເຈົ້າເອງ ຜູ້ທີ່ຢູ່ເໜືອລູກຊາຍກົກ. ເຮົາເປັນຜູ້ມະຫັດສະຈັນສຳລັບຄົນທີ່ບໍ່ແມ່ນລູກຊາຍ, ປະຊາຊົນ ຫຼື ລູກຊາຍກົກ. ຍ້ອນຄວາມມະຫັດສະຈັນຂອງພາລະກິດຂອງເຮົາ, ຜູ້ທີ່ບໍ່ເຊື່ອຈຶ່ງບໍ່ສາມາດເຫັນເຮົາ

ເລີຍ (ຍ້ອນເຮົາໄດ້ປົກປິດຕາຂອງພວກເຂົາ) ແລະ ບໍ່ມີມຸມມອງທີ່ຊັດເຈນກ່ຽວກັບພາລະກິດຂອງເຮົາ. ສະນັ້ນ ສຳລັບພວກເຂົາແລ້ວ ເຮົາຈຶ່ງເປັນຜູ້ມະຫັດສະຈັນ. ສຳລັບມານຮ້າຍ ແລະ ສຳລັບຊາຕານທັງໝົດ, ເຮົາເປັນທີ່ປຶກສາ ເພາະທຸກສິ່ງທີ່ເຮົາເຮັດແມ່ນເພື່ອເຮັດໃຫ້ພວກມັນອັບອາຍ; ການກະທຳທັງໝົດຂອງເຮົາແມ່ນເພື່ອເຫັນແກ່ລູກຊາຍກົກຂອງເຮົາ. ທຸກບາດກ້າວຂອງເຮົາດຳເນີນໄປຢ່າງລາບລື້ນ ແລະ ເຮົາໄດ້ຮັບເອົາໄຊຊະນະໃນແຕ່ລະບາດກ້າວ. ຍິ່ງໄປກວ່ານັ້ນ ເຮົາສາມາດເບິ່ງທະລຸກົນອຸບາຍທັງໝົດຂອງຊາຕານ ແລະ ນຳໃຊ້ພວກມັນເພື່ອຮັບໃຊ້ເຮົາ, ເຮັດໃຫ້ມັນເປັນເປົ້າໝາຍເພື່ອຮັບໃຊ້ຈຸດປະສົງຂອງເຮົາຈາກດ້ານລົບ. ນີ້ແມ່ນຄວາມໝາຍຂອງການທີ່ເຮົາເປັນ "ທີ່ປຶກສາ" ເຊິ່ງບໍ່ມີຜູ້ໃດສາມາດປ່ຽນແປງ ແລະ ບໍ່ມີຜູ້ໃດສາມາດເຂົ້າໃຈໄດ້ຢ່າງສົມບູນ. ເຖິງຢ່າງໃດກໍຕາມ ໃນເລື່ອງຕົວຕົນຂອງເຮົາ, ເຮົາເປັນເຈົ້າຊາຍແຫ່ງສັນຕິພາບ ແລະ ພຣະບິດາຊົ່ວນິດນິລັນ ພ້ອມທັງເປັນທີ່ປຶກສາ ແລະ ຜູ້ມະຫັດສະຈັນ. ບໍ່ມີຫຍັງໃນສິ່ງນີ້ທີ່ບໍ່ເປັນຄວາມຈິງ. ມັນຄືຄວາມຈິງທີ່ບໍ່ສາມາດໂຕ້ແຍ້ງໄດ້ ແລະ ບໍ່ສາມາດປ່ຽນແປງໄດ້!

ເຮົາມີຫຼາຍຢ່າງທີ່ຈະເວົ້າ; ແຕ່ບໍ່ມີຄຳອຸປະມາທີ່ສາມາດຖອດຖອນໃຫ້ເຫັນຢ່າງງ່າຍດາຍ. ສະນັ້ນ ເຮົາຈຶ່ງຮຽກຮ້ອງໃຫ້ພວກເຈົ້າອົດທົນ ແລະ ລໍຖ້າ. ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ, ຢ່າໜີໄປຢ່າງກະທັນຫັນ. ເພາະສິ່ງທີ່ພວກເຈົ້າເຂົ້າໃຈໃນອະດີດແມ່ນຫຼ້າສະໄໝແລ້ວໃນຕອນນີ້, ມັນບໍ່ສາມາດນຳໃຊ້ໄດ້ແລ້ວ ແລະ ປັດຈຸບັນແມ່ນເວລາແຫ່ງການປ່ຽນແປງ ນັ້ນກໍຄື ມັນເປັນຄືກັບການປ່ຽນແປງລະຫວ່າງລາຊະວົງ. ຍ້ອນເຫດຜົນນີ້ ເຮົາຈຶ່ງຕ້ອງການໃຫ້ພວກເຈົ້າປ່ຽນແປງການຄິດຂອງພວກເຈົ້າ ແລະ ປະຖິ້ມແນວຄິດເດີມຂອງພວກເຈົ້າ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງ "ການສວມໃສ່ເສື້ອຄຸມອັນບໍລິສຸດແຫ່ງຄວາມຊອບທຳ". ມີພຽງແຕ່ເຮົາເທົ່ານັ້ນທີ່ສາມາດອະທິບາຍພຣະທຳຂອງເຮົາເອງ ແລະ ມີພຽງແຕ່ເຮົາເອງເທົ່ານັ້ນທີ່ຮູ້ຈັກວ່າເຮົາໄດ້ຮັບຜິດຊອບໃຫ້ເຮັດຫຍັງ. ສະນັ້ນ ມີແຕ່ພຣະທຳຂອງເຮົາເທົ່ານັ້ນທີ່ໄຮ້ມົນທິນ ແລະ ເປັນສິ່ງທີ່ເຮົາເຈດຕະນາທັງສິ້ນ ແລະ ສະນັ້ນ ມັນກໍຄືການສວມໃສ່ເສື້ອຄຸມອັນບໍລິສຸດແຫ່ງຄວາມຊອບທຳ. ການເຂົ້າໃຈຄວາມຄິດຂອງມະນຸດເປັນພຽງຈິນຕະນາການ; ຄວາມເຂົ້າໃຈຂອງມະນຸດບໍ່ບໍລິສຸດ ແລະ ບໍ່ສາມາດບັນລຸເຈດຕະນາຂອງເຮົາໄດ້. ສະນັ້ນ ເຮົາເອງຈຶ່ງເວົ້າ ແລະ ເຮົາເອງຈຶ່ງອະທິບາຍ ແລະ ນີ້ແມ່ນສິ່ງທີ່ເຮົາໝາຍເຖິງ ເມື່ອເຮົາເວົ້າວ່າ "ເຮົາປະຕິບັດພາລະກິດດ້ວຍຕົນເອງ". ມັນຄືພາກສ່ວນທີ່ບໍ່ສາມາດຂາດໄດ້ໃນແຜນການຄຸ້ມຄອງຂອງເຮົາ ແລະ ທຸກຄົນຕ້ອງຖວາຍສະຫງ່າລາສີໃຫ້ແກ່ເຮົາ ແລະ ສັນລະເສີນເຮົາ. ເມື່ອເວົ້າເຖິງການເຂົ້າໃຈພຣະທຳຂອງເຮົາ, ເຮົາບໍ່ເຄີຍມອບອຳນາດນັ້ນໃຫ້ແກ່ມະນຸດຈັກເທື່ອ ຫຼື ພວກເຂົາຈະບໍ່ມີຄວາມສາມາດເຮັດແບບນັ້ນໄດ້. ນີ້ແມ່ນໜຶ່ງໃນວິທີການຂອງເຮົາທີ່ຈະເຮັດໃຫ້ມານຮ້າຍອັບອາຍ. (ຖ້າມະນຸດເຂົ້າໃຈພຣະຄຳຂອງເຮົາ ແລະ ສາມາດກວດສອບເຈດຕະນາຂອງເຮົາໃນທຸກບາດກ້າວ, ແລ້ວຊາຕານກໍຈະສາມາດຄອບຄອງຜູ້ຄົນໃນເວລາໃດກໍຕາມທີ່ມັນຕ້ອງການ ແລະ ຜົນຕາມມາກໍຄື ພວກເຂົາຈະຫັນກັບມາຕໍ່ຕ້ານເຮົາ ແລະ ເຮັດໃຫ້ເປັນໄປບໍ່ໄດ້ທີ່ຈະບັນລຸເປົ້າໝາຍຂອງເຮົາໃນການຄັດເລືອກລູກຊາຍກົກ. ຖ້າເຮົາເຂົ້າໃຈຄວາມລຶກລັບທຸກຢ່າງ ແລະ ຕົວຕົນທີ່ເຮົາເປັນສາມາດກ່າວພຣະຄຳທີ່ບໍ່ມີຜູ້ໃດສາມາດຢັ່ງເຖິງ, ແລ້ວ

ເຮົາກໍຈະສາມາດຖືກຊາຕານຄອບງຳໄດ້ເຊັ່ນກັນ. ນີ້ຄືເຫດຜົນທີ່ວ່າ ໃນຂະນະທີ່ເຮົາຢູ່ໃນເນື້ອໜັງ ເຮົາບໍ່ໄດ້ຢູ່ເໜືອທຳມະຊາດເລີຍ). ມັນຈຳເປັນສຳລັບທຸກຄົນທີ່ຈະມີຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ ຄວາມໝາຍຂອງພຣະທຳເຫຼົ່ານີ້ ແລະ ຕິດຕາມການນຳພາຂອງເຮົາ. ຢ່າພະຍາຍາມເຂົ້າໃຈພຣະທຳ ແລະ ຄຳສັ່ງສອນທີ່ເລິກເຊິ່ງທັງໝົດດ້ວຍຕົນເອງ.

# ບົດທີ 102

ເຮົາໄດ້ເວົ້າໃນລະດັບໃດໜຶ່ງ ແລະ ພາລະກິດຂອງເຮົາກໍໄດ້ໄປເຖິງຈຸດໃດໜຶ່ງ; ພວກເຈົ້າແຕ່ລະຄົນຄວນເຂົ້າໃຈຄວາມປະສົງຂອງເຮົາ ແລະ ສາມາດຄຳນຶງເຖິງພາລະຂອງເຮົາຈົນເຖິງລະດັບທີ່ແຕກຕ່າງກັນໄປ. ຕອນນີ້ແມ່ນຈຸດປ່ຽນ ເມື່ອເນື້ອໜັງປ່ຽນເຂົ້າສູ່ໂລກຝ່າຍວິນຍານ, ພວກເຈົ້າເປັນຜູ້ບຸກເບີກທີ່ຂ້າມລະຫວ່າງຍຸກຕ່າງໆ, ຜູ້ຄົນທົ່ວໄປທີ່ເດີນທາງຂ້າມຈັກກະວານ ແລະ ສຸດປາຍແຜ່ນດິນໂລກ. ພວກເຈົ້າເປັນຜູ້ເປັນທີ່ຮັກທີ່ສຸດຂອງເຮົາ; ພວກເຈົ້າເປັນຄົນທີ່ເຮົາຮັກ. ມັນສາມາດເວົ້າໄດ້ວ່າ ເຮົາບໍ່ໄດ້ຮັກຜູ້ໃດເລີຍ ນອກຈາກພວກເຈົ້າ, ເພາະຄວາມພະຍາຍາມອັນພາກພຽນທັງໝົດຂອງເຮົາແມ່ນເພື່ອເຫັນແກ່ພວກເຈົ້າ. ມັນເປັນໄປໄດ້ບໍວ່າ ພວກເຈົ້າບໍ່ຮູ້ຈັກເຖິງສິ່ງນັ້ນ? ເປັນຫຍັງເຮົາຈຶ່ງສ້າງທຸກສິ່ງ? ເປັນຫຍັງເຮົາຈຶ່ງເຄື່ອນຍ້າຍພວກມັນທັງໝົດ ເພື່ອໃຫ້ຮັບໃຊ້ພວກເຈົ້າ? ການກະທຳທັງໝົດນີ້ແມ່ນການສະແດງອອກເຖິງຄວາມຮັກຂອງເຮົາທີ່ມີຕໍ່ພວກເຈົ້າ. ພູເຂົາ ແລະ ທຸກສິ່ງທີ່ຢູ່ໃນພູເຂົາ ແລະ ແຜ່ນດິນໂລກ ແລະ ທຸກສິ່ງເທິງແຜ່ນດິນໂລກກໍສັນລະເສີນເຮົາ ແລະ ຖວາຍສະຫງ່າລາສີໃຫ້ແກ່ເຮົາທີ່ໄດ້ຮັບເອົາພວກເຈົ້າ. ແທ້ຈິງແລ້ວ ທຸກສິ່ງໄດ້ຖືກດຳເນີນ; ຍິ່ງໄປກວ່ານັ້ນ ທຸກສິ່ງໄດ້ຖືກດຳເນີນຢ່າງລະອຽດຮອບຄອບ. ພວກເຈົ້າເປັນພະຍານທີ່ດັງກ້ອງກັງວານໃຫ້ແກ່ເຮົາ ແລະ ພວກເຈົ້າໄດ້ເຮັດໃຫ້ມານຮ້າຍ ແລະ ຊາຕານຂາຍໜ້າເພື່ອເຮົາ. ທຸກຄົນ, ທຸກເລື່ອງ ແລະ ທຸກສິ່ງທີ່ຢູ່ພາຍນອກຂອງເຮົາກໍຍອມຕໍ່ສິດອຳນາດຂອງເຮົາ ແລະ ທຸກຢ່າງກໍປະຕິບັດຕາມປະເພດຂອງພວກມັນເອງ ເນື່ອງຈາກການສຳເລັດແຜນການຄຸ້ມຄອງຂອງເຮົາ (ປະຊາຊົນຂອງເຮົາກໍເປັນຂອງເຮົາ ແລະ ພັກພວກຂອງຊາຕານກໍລ້ວນແລ້ວແຕ່ເປັນຂອງທະເລສາບແຫ່ງໄຟ ນັ້ນກໍຄື ພວກເຂົາຈະຕົກລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ ເຊິ່ງເປັນບ່ອນທີ່ພວກເຂົາຈະຮ້ອງໄຫ້ຊົ່ວນິດນິລັນ ແລະ ພິນາດໄປຕະຫຼອດການ). ເມື່ອເຮົາເວົ້າວ່າ "ພິນາດ" ແລະ "ນັບຕັ້ງແຕ່ເວລານັ້ນເປັນຕົ້ນມາ ກໍເອົາຈິດໃຈ, ວິນຍານ ແລະ ຮ່າງກາຍຂອງພວກເຂົາໄປ", ເຮົາກຳລັງກ່າວເຖິງການມອບພວກເຂົາໃຫ້ແກ່ຊາຕານ ແລະ ອະນຸຍາດໃຫ້ພວກເຂົາຖືກຢຽບຢໍ່າ. ເວົ້າອີກຢ່າງໜຶ່ງກໍຄື ທຸກຄົນທີ່ບໍ່ໄດ້ຢູ່ໃນເຮືອນຂອງເຮົາຈະເປັນເປົ້າໝາຍໃນການທຳລາຍ ແລະ ພວກເຂົາຈະເຊົາມີຊີວິດຢູ່. ນີ້ບໍ່ໄດ້ໝາຍຄວາມຕາມທີ່ຜູ້ຄົນຈິນຕະນາການວ່າ ພວກເຂົາຈະຫາຍໄປ. ມັນຍັງສາມາດເວົ້າໄດ້ວ່າ ທຸກສິ່ງທີ່ຢູ່ພາຍນອກຕົວເຮົາບໍ່ມີຢູ່ໃນຄວາມຄິດເຫັນຂອງເຮົາ ແລະ ນີ້ບໍ່ແມ່ນຄວາມໝາຍທີ່ແທ້ຈິງຂອງການຕົກນະຮົກ. ໃນສາຍຕາຂອງມະນຸດ ສິ່ງເຫຼົ່ານີ້ຍັງປາກົດວ່າມີຢູ່, ແຕ່ໃນມຸມມອງຂອງເຮົາ ພວກມັນໄດ້ກາຍເປັນຄວາມວ່າງເປົ່າ ແລະ ຈະພິນາດຕະຫຼອດໄປເປັນນິດ. (ເຮົາເນັ້ນຢໍ້າວ່າ ຄົນທີ່ເຮົາບໍ່ປະຕິບັດພາລະກິດອີກຕໍ່ໄປແມ່ນຢູ່ພາຍນອກຕົວເຮົາ). ໃນມະນຸດແລ້ວ ບໍ່ວ່າພວກເຂົາຈະຄິດແນວໃດ, ພວກເຂົາກໍບໍ່ສາມາດຄິດເລື່ອງນີ້ອອກ ແລະ ບໍ່ວ່າພວກເຂົາຈະເຫັນໄດ້ດີສໍ່າໃດ ພວກເຂົາກໍບໍ່ສາມາດເບິ່ງທະລຸມັນໄດ້. ຜູ້ຄົນບໍ່ສາມາດເຂົ້າໃຈໄດ້ຢ່າງຊັດເຈນ ນອກຈາກເຮົາຈະສ່ອງແສງສະຫວ່າງໃຫ້ແກ່ພວກເຂົາ, ເບີ່ງທາງໃຫ້ແກ່ພວກເຂົາ ແລະ ຊີ້ແຈງມັນອອກຢ່າງຊັດເຈນໃຫ້ແກ່ພວກເຂົາ. ຍິ່ງໄປກວ່ານັ້ນ ພວກເຂົາທຸກຄົນເລີ່ມບໍ່ຊັດເຈນຫຼາຍຂຶ້ນເລື້ອຍໆກ່ຽວກັບມັນ,

ຍິ່ງຮູ້ສຶກວ່າງເປົ່າຂຶ້ນຕື່ມ ແລະ ຮູ້ສຶກຫຼາຍຂຶ້ນເລື້ອຍໆວ່າ ບໍ່ມີເສັ້ນທາງໃຫ້ຕິດຕາມ ນັ້ນກໍຄື ພວກເຂົາເກືອບເປັນຄືກັບຄົນຕາຍ. ໃນຕອນນີ້ ມະນຸດສ່ວນໃຫຍ່ (ໝາຍຄວາມວ່າທຸກຄົນ ຍົກເວັ້ນລູກຊາຍກົກ) ແມ່ນຢູ່ໃນສະພາບນີ້. ເຮົາໄດ້ຊີ້ແຈງສິ່ງເຫຼົ່ານີ້ດ້ວຍຄວາມຊັດເຈນສໍ່ານັ້ນ ແຕ່ຜູ້ຄົນເຫຼົ່ານີ້ກໍບໍ່ມີປະຕິກິລິຍາຕອບໂຕ້ຫຍັງ ແລະ ຍັງເປັນຫ່ວງຄວາມສຸກທາງເນື້ອໜັງຂອງພວກເຂົາ. ພວກເຂົາກິນ ແລະ ຫຼັງຈາກນັ້ນ ພວກເຂົາກໍນອນ; ພວກເຂົານອນ ແລະ ຫຼັງຈາກນັ້ນ ພວກເຂົາກໍກິນ. ພວກເຂົາບໍ່ໄຕ່ຕອງໃນພຣະທຳຂອງເຮົາ. ແມ່ນແຕ່ເມື່ອພວກເຂົາມີກຳລັງ ມັນກໍເປັນພຽງຊົ່ວຄາວເທົ່ານັ້ນ; ຫຼັງຈາກນັ້ນ ພວກເຂົາກໍຍັງເປັນຄືກັບທີ່ພວກເຂົາເຄີຍເປັນ, ບໍ່ປ່ຽນແປງຫຍັງທັງສິ້ນ, ຄືກັບວ່າພວກເຂົາບໍ່ໄດ້ຟັງເຮົາເລີຍ. ຜູ້ຄົນເຫຼົ່ານີ້ເປັນມະນຸດທີ່ປົກກະຕິ ແລະ ໄຮ້ປະໂຫຍດ ຜູ້ທີ່ບໍ່ມີພາລະ; ພວກເຂົາເປັນຄົນສວຍໂອກາດຢ່າງຊັດເຈນທີ່ສຸດ. ໃນວັນເວລາຕໍ່ມາ ເຮົາຈະປະຖິ້ມພວກເຂົາເທື່ອລະຄົນ; ບໍ່ຕ້ອງກັງວົນ! ເຮົາຈະສົ່ງພວກເຂົາກັບຄືນສູ່ຂຸມເລິກທີ່ບໍ່ສິ້ນສຸດເທື່ອລະຄົນ. ພຣະວິນຍານບໍລິສຸດບໍ່ເຄີຍປະຕິບັດພາລະກິດໃນຜູ້ຄົນດັ່ງກ່າວ ແລະ ທຸກສິ່ງທີ່ພວກເຂົາເຮັດກໍຫຼັ່ງໄຫຼອອກມາຈາກພອນສະຫວັນທີ່ພວກເຂົາໄດ້ຮັບ. ເມື່ອເຮົາເວົ້າເຖິງພອນສະຫວັນ, ເຮົາໝາຍຄວາມວ່າ ຜູ້ຄົນເຫຼົ່ານີ້ແມ່ນຄົນທີ່ບໍ່ມີຊີວິດ, ຄົນທີ່ເປັນຜູ້ໃຫ້ບໍລິການຂອງເຮົາ; ເຮົາບໍ່ຕ້ອງການພວກເຂົາຈັກຄົນ ແລະ ເຮົາຈະກຳຈັດພວກເຂົາ (ແຕ່ໃນຕອນນີ້ ພວກເຂົາຍັງມີປະໂຫຍດຢູ່ໜ້ອຍໜຶ່ງ). ພວກເຈົ້າເປັນຜູ້ໃຫ້ບໍລິການ, ຈົ່ງຟັງໄວ້! ຢ່າຄິດວ່າການທີ່ເຮົາໃຊ້ເຈົ້າໝາຍຄວາມວ່າ ເຮົານິຍົມຊົມຊອບເຈົ້າ; ມັນບໍ່ໄດ້ງ່າຍແບບນັ້ນ. ຖ້າເຈົ້າຕ້ອງການໃຫ້ເຮົານິຍົມຊົມຊອບໃນຕົວເຈົ້າ, ແລ້ວເຈົ້າກໍຕ້ອງເປັນຄົນທີ່ເຮົາຮອງຮັບ ແລະ ເປັນຄົນທີ່ເຮົາເຮັດໃຫ້ສົມບູນດ້ວຍຕົນເອງ. ນີ້ແມ່ນຄົນປະເພດທີ່ເຮົາຮັກ. ເຖິງແມ່ນວ່າຜູ້ຄົນເວົ້າວ່າ ເຮົາໄດ້ເຮັດຜິດ ເຮົາກໍຈະບໍ່ຜິດຄຳສັນຍາຈັກເທື່ອ. ເຈົ້າຮູ້ຈັກສິ່ງນີ້ບໍ? ຄົນທີ່ໃຫ້ບໍລິການເປັນພຽງງົວຄວາຍ ແລະ ມ້າ; ພວກເຂົາຈະສາມາດເປັນລູກຊາຍກົກຂອງເຮົາໄດ້ແນວໃດ? ແບບນັ້ນຈະບໍ່ໄຮ້ສາລະບໍ? ມັນບໍ່ແມ່ນການລະເມີດກົດເກນທຳມະຊາດບໍ? ຜູ້ໃດກໍຕາມທີ່ມີຊີວິດຂອງເຮົາ ແລະ ຄຸນລັກສະນະຂອງເຮົາ, ຄົນເຫຼົ່ານີ້ເປັນລູກຊາຍກົກຂອງເຮົາ. ນີ້ແມ່ນສິ່ງທີ່ສົມເຫດສົມຜົນ; ບໍ່ມີຜູ້ໃດສາມາດໂຕ້ແຍ້ງມັນໄດ້. ມັນຕ້ອງເປັນແບບນັ້ນ; ບໍ່ດັ່ງນັ້ນຈະບໍ່ມີຜູ້ໃດເຮັດບົດບາດນີ້ໄດ້ ແລະ ບໍ່ມີຜູ້ໃດສາມາດທົດແທນມັນໄດ້. ນີ້ບໍ່ແມ່ນເລື່ອງທີ່ຖືກປະຕິບັດຕາມອາລົມ ຍ້ອນເຮົາເອງເປັນພຣະເຈົ້າທີ່ຊອບທຳ; ເຮົາເອງເປັນພຣະເຈົ້າທີ່ບໍລິສຸດ. ເຮົາເປັນພຣະເຈົ້າທີ່ສະຫງ່າຜ່າເຜີຍ ແລະ ບໍ່ສາມາດລ່ວງເກີນໄດ້!

ທຸກສິ່ງທີ່ເປັນໄປບໍ່ໄດ້ສຳລັບມະນຸດກໍດຳເນີນໄປຢ່າງລາບລື່ນ ແລະ ເປັນອິດສະຫຼະສຳລັບເຮົາ. ບໍ່ມີຜູ້ໃດສາມາດຢຸດມັນໄດ້ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ໂລກນີ້ພ້ອມກັບຄວາມໃຫຍ່ໂຕຂອງມັນທັງໝົດແມ່ນຢູ່ໃນມືຂອງເຮົາທັງສິ້ນ ບໍ່ຕ້ອງກ່າວເຖິງຊາຕານຊົ່ວຮ້າຍໂຕນ້ອຍໆ. ຖ້າມັນບໍ່ແມ່ນຍ້ອນແຜນການຄຸ້ມຄອງຂອງເຮົາ ແລະ ຖ້າມັນບໍ່ແມ່ນຍ້ອນລູກຊາຍກົກຂອງເຮົາ ເຮົາຄົງຈະທຳລາຍຄົນຊົ່ວຮ້າຍທີ່ເຖົ້າແກ່ນີ້ ພ້ອມທັງຍຸກທີ່ສືບສັນປົນເປເຊິ່ງຖືກແຊກຊຶມດ້ວຍກິ່ນເໝັນແຫ່ງຄວາມຕາຍແຕ່ດົນແລ້ວ. ເຖິງຢ່າງໃດກໍຕາມ ເຮົາປະຕິບັດດ້ວຍຄວາມຖືກຕ້ອງ ແລະ ເຮົາບໍ່ເວົ້າແບບ

ງ່າຍໆ. ຫຼັງຈາກທີ່ເຮົາເວົ້າບາງສິ່ງໄປ ມັນກໍຈະສຳເລັດ; ເຖິງແມ່ນວ່າສິ່ງນີ້ບໍ່ໄດ້ເປັນແບບນັ້ນ ມັນກໍຈະມີລັກສະນະຂອງສະຕິປັນຍາຂອງເຮົາຢູ່ສະເໝີ ເຊິ່ງຈະເຮັດໃຫ້ທຸກສິ່ງສຳເລັດໄປສຳລັບເຮົາ ແລະ ເປີດທົນທາງໃຫ້ແກ່ການກະທຳຂອງເຮົາ. ນີ້ກໍຍ້ອນວ່າພຣະທຳຂອງເຮົາຄືສະຕິປັນຍາຂອງເຮົາ; ພຣະທຳຂອງເຮົາແມ່ນທຸກສິ່ງ. ໂດຍພື້ນຖານແລ້ວ ຜູ້ຄົນລົ້ມເຫຼວທີ່ຈະເຂົ້າໃຈພວກມັນ ແລະ ບໍ່ສາມາດຄິດພວກມັນອອກໄດ້. ເຮົາມັກກ່າວເຖິງ "ທະເລສາບແຫ່ງໄຟ". ມັນໝາຍຄວາມວ່າແນວໃດ? ມັນແຕກຕ່າງຈາກທະເລສາບແຫ່ງໄຟ ແລະ ມາດແນວໃດ? ທະເລສາບແຫ່ງໄຟ ແລະ ມາດໝາຍເຖິງອິດທິພົນຂອງຊາຕານ, ໃນຂະນະທີ່ທະເລສາບແຫ່ງໄຟໝາຍເຖິງໂລກທັງປວງທີ່ຢູ່ພາຍໃຕ້ອຳນາດຂອງຊາຕານ. ທຸກຄົນຢູ່ໃນໂລກຕົກຢູ່ພາຍໃຕ້ການເຜົາຕົວເອງໃນທະເລສາບແຫ່ງໄຟ (ນັ້ນກໍຄື ພວກເຂົາເລີ່ມເສື່ອມຊາມຂຶ້ນເລື້ອຍໆ ແລະ ຫຼັງຈາກທີ່ຄວາມເສື່ອມຊາມຂອງພວກເຂົາໄດ້ໄປເຖິງລະດັບໃດໜຶ່ງ ພວກເຂົາກໍຈະຖືກເຮົາທຳລາຍເທື່ອລະຄົນ ເຊິ່ງເຮົາຈະສາມາດເຮັດໄດ້ແບບງ່າຍໆດ້ວຍພຣະຄຳພຽງຄຳດຽວເທົ່ານັ້ນ). ຍິ່ງຄວາມໂກດຮ້າຍຂອງເຮົາມີຫຼາຍສໍ່າໃດ, ໄຟກໍຈະລຸກໄໝ້ສູງຂຶ້ນທົ່ວທະເລສາບແຫ່ງໄຟຫຼາຍຂຶ້ນສໍ່ານັ້ນ. ສິ່ງນີ້ໝາຍເຖິງວິທີທີ່ຜູ້ຄົນເລີ່ມຊົ່ວຮ້າຍຂຶ້ນເລື້ອຍໆ. ເວລາທີ່ຄວາມໂກດຮ້າຍຂອງເຮົາລະເບີດອອກກໍຍັງຈະເປັນເວລາທີ່ທະເລສາບແຫ່ງໄຟລະເບີດອອກ; ນັ້ນກໍຄື ມັນຈະເປັນເວລາທີ່ຈັກກະວານທັງປວງຈະພິນາດໄປ. ໃນມື້ນັ້ນ ອານາຈັກຂອງເຮົາຈະກາຍເປັນຈິງຢ່າງສົມບູນເທິງແຜ່ນດິນໂລກ ແລະ ຊີວິດໃໝ່ຈະເລີ່ມຕົ້ນຂຶ້ນ. ນີ້ແມ່ນສິ່ງທີ່ຈະຖືກບັນລຸໃນອີກບໍ່ດົນ. ເມື່ອເຮົາກຳລັງເວົ້າເຖິງມັນ ທຸກສິ່ງກໍຈະປາກົດອອກມາເປັນມຸມມອງທີ່ສົມບູນ. ນີ້ແມ່ນມຸມມອງຂອງມະນຸດກ່ຽວກັບສິ່ງນັ້ນ, ແຕ່ໃນມຸມມອງຂອງເຮົາ ສິ່ງຕ່າງໆໄດ້ຖືກເຮັດໃຫ້ສຳເລັດລ່ວງໜ້າແລ້ວ ຍ້ອນເຮົາ ທຸກສິ່ງຈຶ່ງງ່າຍດາຍ. ເຮົາເວົ້າ ແລະ ມັນກໍສຳເລັດ; ເຮົາເວົ້າ ແລະ ມັນກໍຖືກກຳນົດຂຶ້ນ.

ທຸກມື້ ພວກເຈົ້າກິນຈາກພຣະທຳຂອງເຮົາ, ເພີດເພີນກັບຄວາມຕຸ້ຍພີໃນວິຫານຂອງເຮົາ, ດື່ມນໍ້າຈາກແມ່ນໍ້າແຫ່ງຊີວິດຂອງເຮົາ ແລະ ເດັດໝາກໄມ້ອອກຈາກຕົ້ນໄມ້ແຫ່ງຊີວິດຂອງເຮົາ. ແລ້ວແມ່ນຫຍັງຄືຄວາມຕຸ້ຍພີໃນວິຫານຂອງເຮົາ? ແມ່ນຫຍັງຄືນໍ້າໃນແມ່ນໍ້າແຫ່ງຊີວິດຂອງເຮົາ? ແມ່ນຫຍັງຄືຕົ້ນໄມ້ແຫ່ງຊີວິດ? ແມ່ນຫຍັງຄືໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ? ເຖິງແມ່ນວະລີເຫຼົ່ານີ້ອາດເປັນວະລີທົ່ວໄປ ເຖິງແນວໃດກໍຕາມ ມະນຸດທຸກຄົນຜູ້ທີ່ສັບສົນທັງໝົດກໍບໍ່ສາມາດເຂົ້າໃຈພວກມັນໄດ້. ພວກເຂົາເວົ້າພວກມັນໂດຍບໍ່ມີຄວາມຮັບຜິດຊອບ, ໃຊ້ພວກມັນຢ່າງເລີນເລີ້ ແລະ ນຳໃຊ້ພວກມັນຕາມອຳເພີໃຈ. ຄວາມຕຸ້ຍພີໃນວິຫານບໍ່ໄດ້ໝາຍເຖິງພຣະທຳທີ່ເຮົາໄດ້ກ່າວ ຫຼື ຄວາມກະລຸນາທີ່ເຮົາໄດ້ປະທານໃຫ້ແກ່ພວກເຈົ້າ. ແລ້ວມັນໝາຍເຖິງຫຍັງກັນແທ້? ນັບຕັ້ງແຕ່ເວລາດຶກດຳບັນ ບໍ່ເຄີຍມີຜູ້ໃດທີ່ໂຊກດີພໍທີ່ຈະໄດ້ເພີດເພີນກັບຄວາມຕຸ້ຍພີໃນວິຫານຂອງເຮົາ. ມີແຕ່ໃນຍຸກສຸດທ້າຍເທົ່ານັ້ນ ໃນທ່າມກາງລູກຊາຍກົກຂອງເຮົາ ຜູ້ຄົນຈຶ່ງສາມາດເຫັນວ່າ ຄວາມຕຸ້ຍພີນີ້ໃນວິຫານຂອງເຮົາໝາຍເຖິງຫຍັງ. "ວິຫານ" ໃນວະລີນີ້ໝາຍເຖິງຕົວຕົນຂອງເຮົາ; ມັນໝາຍເຖິງພູຊີໂອນ, ທີ່ພັກອາໄສຂອງເຮົາ. ຫາກບໍ່ມີການອະນຸຍາດຂອງເຮົາ ບໍ່ມີຜູ້ໃດສາມາດເຂົ້າສູ່ມັນໄດ້ ຫຼື ອອກຈາກມັນໄດ້. "ຄວາມຕຸ້ຍພີ" ໝາຍເຖິງຫຍັງ? ມັນໝາຍເຖິງພອນຂອງການທີ່ສາມາດປົກຄອງກັບເຮົາໃນຮ່າງກາຍ. ເວົ້າໂດຍທົ່ວໄປ

ແລ້ວ ນີ້ໝາຍເຖິງພອນຂອງລູກຊາຍກົກທີ່ສາມາດປົກຄອງກັບເຮົາໃນຮ່າງກາຍ ແລະ ສິ່ງນີ້ບໍ່ໄດ້ເຂົ້າໃຈຍາກເລີຍ. ນໍ້າຈາກແມ່ນໍ້າແຫ່ງຊີວິດມີສອງຄວາມໝາຍ: ໃນດ້ານໜຶ່ງ ມັນໝາຍເຖິງນໍ້າທີ່ມີຊີວິດທີ່ຫຼັ່ງໄຫຼຈາກການເປັນຢູ່ຂ້າງໃນສຸດຂອງເຮົາ ນັ້ນກໍຄື ພຣະທຳທຸກຂໍ້ທີ່ອອກມາຈາກປາກຂອງເຮົາ. ໃນອີກດ້ານໜຶ່ງແມ່ນມັນໝາຍເຖິງສະຕິປັນຍາ ແລະ ຍຸດທະສາດທີ່ຢູ່ເບື້ອງຫຼັງການກະທຳຂອງເຮົາ ພ້ອມທັງສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີ. ພຣະທຳຂອງເຮົາມີຄວາມລຶກລັບທີ່ບໍ່ສິ້ນສຸດ ແລະ ລີ້ລັບ (ແລະ ການທີ່ຄວາມລຶກລັບບໍ່ໄດ້ລີ້ລັບອີກຕໍ່ໄປແມ່ນຖືກກ່າວເຖິງໂດຍກົງກັນຂ້າມກັບອະດີດ, ແຕ່ເມື່ອປຽບທຽບກັບການເປີດເຜີຍສູ່ສາທາລະນະທີ່ຈະເກີດຂຶ້ນໃນອະນາຄົດ ພວກມັນກໍຍັງລີ້ລັບຢູ່. ໃນທີ່ນີ້ "ການລີ້ລັບ" ບໍ່ໄດ້ເດັດຂາດ; ມັນກ່ຽວຂ້ອງກັນ). ເວົ້າອີກຢ່າງໜຶ່ງກໍຄື ນໍ້າຈາກແມ່ນໍ້າແຫ່ງຊີວິດແມ່ນໄຫຼຢູ່ຕະຫຼອດ. ໃນຕົວເຮົາແມ່ນມີສະຕິປັນຍາທີ່ບໍ່ສິ້ນສຸດ ແລະ ຜູ້ຄົນບໍ່ສາມາດເຂົ້າໃຈສິ່ງທີ່ເຮົາເປັນ ແລະ ສິ່ງທີ່ເຮົາມີໄດ້ຢ່າງສິ້ນເຊີງ; ນັ້ນກໍຄື ນໍ້າຈາກແມ່ນໍ້າແຫ່ງຊີວິດໄຫຼຢູ່ຕະລອດ. ໃນມຸມມອງຂອງມະນຸດແມ່ນມີຕົ້ນໄມ້ທີ່ສາມາດຈັບຕ້ອງໄດ້ຫຼາຍປະເພດ, ແຕ່ບໍ່ມີຜູ້ໃດເຄີຍເຫັນຕົ້ນໄມ້ແຫ່ງຊີວິດ. ເຖິງຢ່າງໃດກໍຕາມ ເຖິງແມ່ນຈະເຫັນມັນໃນມື້ນີ້ ຜູ້ຄົນກໍຍັງບໍ່ຮັບຮູ້ມັນໄດ້ ແລະ ເຖິງຢ່າງໃດກໍຕາມ ພວກເຂົາເຖິງກັບເວົ້າເຖິງການກິນຈາກຕົ້ນໄມ້ແຫ່ງຊີວິດ. ມັນເປັນຕາຫົວແທ້ໆ! ພວກເຂົາຈະໄດ້ກິນຈາກມັນໂດຍບໍ່ຈຳແນກ! ເປັນຫຍັງເຮົາຈຶ່ງເວົ້າວ່າ ໃນມື້ນີ້ ຜູ້ຄົນເຫັນມັນ ແຕ່ບໍ່ຮັບຮູ້ມັນ? ເປັນຫຍັງເຮົາຈຶ່ງເວົ້າແບບນັ້ນ? ເຈົ້າເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາບໍ? ພຣະເຈົ້າທີ່ແທ້ຈິງໃນມື້ນີ້ແມ່ນຕົວຕົນທີ່ເຮົາເປັນ ແລະ ພຣະອົງຄືຕົ້ນໄມ້ແຫ່ງຊີວິດ. ຢ່າໃຊ້ແນວຄິດມະນຸດເພື່ອວັດແທກເຮົາ. ໃນພາຍນອກ ເຮົາບໍ່ໄດ້ເບິ່ງຄືຕົ້ນໄມ້, ແຕ່ເຈົ້າຮູ້ບໍວ່າ ໃນຄວາມເປັນຈິງແລ້ວ ເຮົາເປັນຕົ້ນໄມ້ແຫ່ງຊີວິດ? ທຸກໆການເໜັງຕີງຂອງເຮົາ, ຄຳເວົ້າຂອງເຮົາ ແລະ ລັກສະນະຂອງເຮົາແມ່ນໝາກຜົນຈາກຕົ້ນໄມ້ແຫ່ງຊີວິດ ແລະ ພວກມັນແມ່ນຕົວຕົນຂອງເຮົາ ນັ້ນກໍຄື ພວກມັນແມ່ນສິ່ງທີ່ລູກຊາຍກົກຂອງເຮົາຄວນກິນ ສະນັ້ນ ໃນທີ່ສຸດແລ້ວ ມີພຽງແຕ່ລູກຊາຍກົກຂອງເຮົາ ແລະ ເຮົາເທົ່ານັ້ນທີ່ຈະຄ້າຍຄືກັນແທ້ໆ. ພວກເຂົາຈະສາມາດດຳລົງຊີວິດຕາມເຮົາ ແລະ ເປັນພະຍານໃຫ້ແກ່ເຮົາ. (ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຈະເກີດຂຶ້ນຫຼັງຈາກທີ່ພວກເຮົາເຂົ້າສູ່ໂລກຝ່າຍວິນຍານ. ພຽງແຕ່ໃນຮ່າງກາຍເທົ່ານັ້ນ ພວກເຮົາຈຶ່ງສາມາດເປັນຄືກັນໄດ້ແທ້ໆ; ໃນເນື້ອໜັງ ພວກເຮົາສາມາດມີຄວາມຄ້າຍຄືກັນໂດຍພໍປະມານເທົ່ານັ້ນແຕ່ພວກເຮົາຍັງມີຄວາມມັກຂອງພວກເຮົາເອງ).

ເຮົາບໍ່ພຽງແຕ່ຈະເປີດເຜີຍອຳນາດຂອງເຮົາໃນລູກຊາຍກົກຂອງເຮົາເທົ່ານັ້ນ, ແຕ່ເຮົາຍັງຈະເປີດເຜີຍມັນໃນການທີ່ພວກເຂົາປົກຄອງເໜືອທຸກຊົນຊາດ ແລະ ທຸກຄົນ. ນີ້ແມ່ນບາດກ້າວໜຶ່ງໃນພາລະກິດຂອງເຮົາ. ຕອນນີ້ແມ່ນກະແຈ ແລະ ຍິ່ງໄປກວ່ານັ້ນ ຕອນນີ້ແມ່ນຈຸດປ່ຽນ. ເມື່ອທຸກສິ່ງໄດ້ສຳເລັດລົງ ພວກເຈົ້າກໍຈະໄດ້ເຫັນວ່າ ມືຂອງເຮົາກຳລັງເຮັດວຽກກັບຫຍັງ ແລະ ພວກເຈົ້າຈະເຫັນວ່າເຮົາວາງແຜນແນວໃດ ແລະ ເຮົາຈັດການແນວໃດ ນັ້ນກໍຄື ເຖິງຢ່າງໃດກໍຕາມ ນີ້ກໍບໍ່ແມ່ນສິ່ງທີ່ເລື່ອນລອຍ. ໃນທ່າມກາງພະລັງຂອງທຸກປະເທດເທິງໂລກ, ມັນບໍ່ໄດ້ຫ່າງໄກຫຼາຍເກີນໄປ; ມັນແມ່ນສິ່ງທີ່ຜູ້ຄົນບໍ່ສາມາດຈິນຕະນາການໄດ້ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນສິ່ງທີ່ພວກເຂົາບໍ່ສາມາດຮູ້ໄດ້

ລ່ວງໜ້າ. ເຈົ້າຕ້ອງບໍ່ປະໝາດ ຫຼື ລະເລີຍໂດຍເດັດຂາດ ເພື່ອວ່າຈະບໍ່ໄດ້ພາດໂອກາດທີ່ຈະໄດ້ຮັບພອນ ແລະ ໄດ້ຮັບລາງວັນ. ໂອກາດຂອງອານາຈັກແມ່ນໄດ້ປາກົດຂຶ້ນແລ້ວ ແລະ ໂລກທັງປວງກຳລັງລົ້ມລົງຕາຍເທື່ອລະໜ້ອຍ. ຈາກຂຸມເລິກທີ່ບໍ່ສິ້ນສຸດ ແລະ ຈາກທະເລສາບແຫ່ງໄຟ ແລະ ມາດ, ສຽງຮ້ອງໄຫ້ທີ່ດັງກໍປາກົດອອກມາ, ເຮັດໃຫ້ຜູ້ຄົນຢ້ານຫຼາຍແທ້ໆ ແລະ ເຮັດໃຫ້ພວກເຂົາຮູ້ສຶກຢ້ານກົວ ແລະ ບໍ່ມີບ່ອນໃຫ້ຫຼົບລີ້. ຜູ້ໃດກໍຕາມທີ່ຖືກເລືອກໃນນາມຂອງເຮົາ ແລະ ຫຼັງຈາກນັ້ນຖືກກຳຈັດຈະຈົບລົງໃນຂຸມເລິກທີ່ບໍ່ສິ້ນສຸດ. ສະນັ້ນ ດັ່ງທີ່ເຮົາໄດ້ເວົ້າຫຼາຍໆຄັ້ງແລ້ວ ເຮົາຈະໂຍນຄົນທີ່ເຮົາຈະໂຍນຖິ້ມສູ່ຂຸມເລິກທີ່ບໍ່ສິ້ນສຸດ. ເມື່ອໂລກທັງປວງຖືກທຳລາຍ, ທຸກສິ່ງທີ່ຖືກທຳລາຍຈະຕົກລົງສູ່ທະເລສາບແຫ່ງໄຟ ແລະ ມາດ. ເວົ້າອີກຢ່າງໜຶ່ງກໍຄື ສິ່ງເຫຼົ່ານີ້ຈະຖືກເຄື່ອນຍ້າຍຈາກທະເລສາບແຫ່ງໄຟໄປສູ່ທະເລສາບແຫ່ງໄຟ ແລະ ມາດ. ໃນເວລານັ້ນ ທຸກຄົນຈະຖືກກຳນົດເພື່ອຮັບຄວາມພິນາດຕະຫຼອດໄປເປັນນິດ (ໝາຍຄວາມເຖິງທຸກຄົນທີ່ຢູ່ພາຍນອກຕົວເຮົາ) ຫຼື ຮັບຊີວິດຕະຫຼອດໄປເປັນນິດ (ໝາຍເຖິງທຸກຄົນທີ່ຢູ່ພາຍໃນຕົວເຮົາ). ໃນເວລານັ້ນ ເຮົາ ແລະ ລູກຊາຍກົກຂອງເຮົາຈະປາກົດອອກຈາກອານາຈັກ ແລະ ເຂົ້າສູ່ຄວາມນິລັນດອນ. ນີ້ແມ່ນສິ່ງທີ່ຈະຖືກເຮັດໃຫ້ສຳເລັດໃນພາຍຫຼັງ; ເຖິງແມ່ນວ່າເຮົາຕ້ອງບອກພວກເຈົ້າໃນຕອນນີ້, ພວກເຈົ້າກໍຈະບໍ່ເຂົ້າໃຈ. ພວກເຈົ້າພຽງແຕ່ຕິດຕາມການນຳພາຂອງເຮົາ, ຍ່າງໃນແສງສະຫວ່າງຂອງເຮົາ, ຕິດຕາມເຮົາໃນຄວາມຮັກຂອງເຮົາ, ພົບກັບຄວາມສຸກຮ່ວມກັບເຮົາໃນເຮືອນຂອງເຮົາ, ປົກຄອງຮ່ວມກັບເຮົາໃນອານາຈັກຂອງເຮົາ ແລະ ປົກຄອງຮ່ວມກັບເຮົາເໜືອທຸກຊົນຊາດ ແລະ ທຸກຄົນພາຍໃຕ້ສິດອຳນາດຂອງເຮົາ. ທຸກສິ່ງທີ່ເຮົາໄດ້ອະທິບາຍຂ້າງເທິງປະກອບມີພອນອັນບໍ່ສິ້ນສຸດທີ່ເຮົາກຳລັງມອບໃຫ້ແກ່ພວກເຈົ້າ.

# ບົດທີ 103

ສຽງທີ່ດັງຄືສຽງຟ້າຮ້ອງໄດ້ດັງອອກມາ ເຊິ່ງເຮັດໃຫ້ຈັກກະວານທັງໝົດສັ່ນສະເທືອນ. ມັນເຮັດໃຫ້ໜວກຫູຫຼາຍຈົນຜູ້ຄົນບໍ່ສາມາດຫຼົບຫຼີກຈາກທາງຂອງມັນໄດ້ທັນເວລາ. ບາງຄົນຖືກຂ້າ, ບາງຄົນຖືກທຳລາຍ ແລະ ບາງຄົນຖືກພິພາກສາ. ມັນເປັນພາບທີ່ສະຫງ່າງາມແທ້ໆ ເຊິ່ງເປັນສິ່ງທີ່ບໍ່ເຄີຍມີໃຜເຫັນມາກ່ອນ. ຈົ່ງຟັງດີໆ: ສຽງຟ້າຮ້ອງແມ່ນຕາມດ້ວຍສຽງຮ້ອງໄຫ້ ແລະ ສຽງນີ້ແມ່ນມາຈາກແດນມໍລະນາ; ມັນມາຈາກນະຣົກ. ມັນເປັນສຽງທີ່ຂົມຂື່ນຂອງບຸດຊາຍແຫ່ງການກະບົດເຫຼົ່ານັ້ນ ທີ່ຖືກເຮົາພິພາກສາ. ຜູ້ທີ່ບໍ່ໄດ້ຟັງໃນສິ່ງທີ່ເຮົາກ່າວ ແລະ ຜູ້ທີ່ບໍ່ໄດ້ນຳເອົາພຣະທຳຂອງເຮົາໄປປະຕິບັດແມ່ນຖືກພິພາກສາຢ່າງໜັກ ແລະ ໄດ້ຮັບການສາບແຊ່ງຈາກຄວາມໂກດຮ້າຍຂອງເຮົາ. ສຽງຂອງເຮົາແມ່ນການພິພາກສາ ແລະ ຄວາມໂກດຮ້າຍ; ເຮົາບໍ່ປະຕິບັດກັບຜູ້ໃດດ້ວຍຄວາມອ່ອນໂຍນ ແລະ ບໍ່ສະແດງຄວາມເມດຕາຕໍ່ຜູ້ໃດ ເພາະວ່າເຮົາແມ່ນພຣະເຈົ້າທີ່ຊອບທຳ ແລະ ເຮົາມີຄວາມໂກດຮ້າຍ; ເຮົາມີການເຜົາຜານ, ການຊຳລະລ້າງ ແລະ ການທຳລາຍລ້າງ. ໃນຕົວເຮົາ ແມ່ນບໍ່ມີສິ່ງໃດທີ່ລີ້ລັບ ຫຼື ມີອາລົມແຕ່ໃນທາງກົງກັນຂ້າມ ທຸກສິ່ງແມ່ນເປີດເຜີຍ, ຊອບທຳ ແລະ ຍຸຕິທຳ. ຍ້ອນບຸດຊາຍກົກຂອງເຮົາແມ່ນຢູ່ກັບເຮົາທີ່ບັນລັງແລ້ວ ໂດຍທີ່ປົກຄອງທຸກຊາດ ແລະ ທຸກຄົນ, ສິ່ງຕ່າງໆ ແລະ ຜູ້ຄົນເຫຼົ່ານັ້ນທີ່ບໍ່ຍຸຕິທຳ ແລະ ບໍ່ຊອບທຳຈຶ່ງເລີ່ມຖືກພິພາກສາໃນຕອນນີ້. ເຮົາຈະສືບສວນພວກເຂົາເທື່ອລະຄົນ ໂດຍບໍ່ໃຫ້ພາດຫຍັງ ແລະ ຈະເປີດໂປງພວກເຂົາຈົນໝົດ. ເນື່ອງຈາກການພິພາກສາຂອງເຮົາໄດ້ຖືກເປີດໂປງຈົນໝົດ ແລະ ເປີດເຜີຍຈົນໝົດ ແລະ ເຮົາບໍ່ໄດ້ເກັບຫຍັງໄວ້ເລີຍ; ເຮົາຈະໂຍນທຸກສິ່ງທີ່ບໍ່ເຮັດຕາມຄວາມປະສົງຂອງເຮົາຖິ້ມ ແລະ ປ່ອຍໃຫ້ມັນດັບສູນໃນຂຸມເລິກຊົ່ວນິດນິລັນ. ຢູ່ບ່ອນນັ້ນ ເຮົາຈະປ່ອຍໃຫ້ມັນຖືກເຜົາໄໝ້ຕະຫຼອດການ. ນີ້ແມ່ນຄວາມຊອບທຳຂອງເຮົາ ແລະ ນີ້ແມ່ນຄວາມຊື່ຕົງຂອງເຮົາ. ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້ ແລະ ທຸກຄົນຕ້ອງຢູ່ພາຍໃຕ້ການບັນຊາຂອງເຮົາ.

ຄົນສ່ວນໃຫຍ່ເມີນເສີຍຕໍ່ການກ່າວພຣະທຳຂອງເຮົາ ໂດຍຄິດວ່າ ພຣະທຳເປັນພຽງພຣະທຳ ແລະ ຄວາມຈິງກໍຄືຄວາມຈິງ. ພວກເຂົາຈັ່ງແມ່ນຕາບອດ! ພວກເຂົາບໍ່ຮູ້ວ່າ ເຮົາແມ່ນພຣະເຈົ້າຜູ້ຊື່ສັດບໍ? ພຣະທຳ ແລະ ຄວາມຈິງຂອງເຮົາແມ່ນເກີດຂຶ້ນໃນເວລາດຽວກັນ. ນີ້ບໍ່ແມ່ນເລື່ອງທີ່ແທ້ຈິງບໍ? ຜູ້ຄົນພຽງແຕ່ບໍ່ເຂົ້າໃຈພຣະທຳຂອງເຮົາ ແລະ ມີແຕ່ຜູ້ທີ່ໄດ້ຮັບແສງສະຫວ່າງເທົ່ານັ້ນ ທີ່ສາມາດເຂົ້າໃຈໄດ້ຢ່າງແທ້ຈິງ. ນີ້ແມ່ນຄວາມຈິງ. ທັນທີທີ່ຜູ້ຄົນເຫັນພຣະທຳຂອງເຮົາ, ພວກເຂົາກໍຕົກໃຈຫຼາຍ ແລະ ແລ່ນໜີໄປທົ່ວທຸກບ່ອນເພື່ອໄປລີ້. ນີ້ຍິ່ງເປັນເລື່ອງກວ່າ ເມື່ອການພິພາກສາຂອງເຮົາໄດ້ຕົກລົງມາ. ເມື່ອເຮົາສ້າງທຸກສັບພະສິ່ງ, ເມື່ອເຮົາທຳລາຍໂລກ ແລະ ເມື່ອເຮົາເຮັດໃຫ້ບຸດຊາຍກົກສົມບູນ, ສິ່ງເຫຼົ່ານີ້ທັງໝົດຈະຖືກບັນລຸດ້ວຍພຣະທຳພຽງຂໍ້ດຽວຈາກປາກຂອງເຮົາ. ນີ້ກໍຍ້ອນວ່າ ພຣະທຳຂອງເຮົາແມ່ນສິດອຳນາດ; ມັນແມ່ນການພິພາກສາ. ສາມາດເວົ້າໄດ້ວ່າ ຄົນທີ່ເຮົາເປັນແມ່ນການພິພາກສາ ແລະ ຄວາມສະຫງ່າຜ່າເຜີຍ, ນີ້ແມ່ນຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້. ນີ້ແມ່ນພາກສ່ວນໜຶ່ງຂອງພຣະດຳລັດແຫ່ງການປົກຄອງຂອງເຮົາ; ມັນແມ່ນວິທີໜຶ່ງທີ່ເຮົາພິພາກສາຜູ້ຄົນ. ໃນສາຍຕາຂອງເຮົາ, ທຸກສິ່ງ

ລວມທັງທຸກຄົນ, ທຸກເລື່ອງ ແລະ ທຸກຢ່າງແມ່ນຢູ່ໃນມືຂອງເຮົາ ແລະ ຢູ່ພາຍໃຕ້ການພິພາກສາຂອງເຮົາ. ບໍ່ມີຜູ້ໃດ ແລະ ບໍ່ມີສິ່ງໃດກ້າທີ່ຈະປະພຶດຢ່າງປ່າເຖື່ອນ ແລະ ໂດຍເຈດຕະນາ ແລະ ທຸກສິ່ງຈະຕ້ອງຖືກບັນລຸຕາມພຣະທຳທີ່ເຮົາກ່າວ. ຈາກພາຍໃນແນວຄິດຂອງມະນຸດ, ທຸກຄົນເຊື່ອພຣະທຳຂອງຄົນທີ່ເຮົາເປັນ. ເມື່ອພຣະວິນຍານຂອງເຮົາອອກສຽງ, ທຸກຄົນກໍສົງໄສ. ຜູ້ຄົນບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍກ່ຽວກັບອຳນາດອັນໄພສານຂອງເຮົາ ແລະ ພວກເຂົາເຖິງກັບກ່າວຫາເຮົາ. ເຮົາຂໍບອກເຈົ້າຕອນນີ້ເລີຍວ່າ ຜູ້ໃດກໍຕາມທີ່ມີຄວາມສົງໄສຕໍ່ພຣະທຳຂອງເຮົາ ແລະ ໃຜກໍຕາມທີ່ດູຖູກພຣະທຳຂອງເຮົາ, ຄົນເຫຼົ່ານີ້ຈະເປັນຜູ້ທີ່ຖືກທຳລາຍ; ພວກເຂົາແມ່ນບຸດຊາຍທີ່ຕົກນະຮົກຊໍ້າແລ້ວຊໍ້າອີກ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ມີໜ້ອຍຄົນທີ່ແມ່ນບຸດຊາຍກົກ ຍ້ອນນີ້ແມ່ນວິທີທີ່ເຮົາປະຕິບັດພາລະກິດ. ດັ່ງທີ່ເຮົາໄດ້ກ່າວກ່ອນໜ້ານັ້ນ, ເຮົາເຮັດໃຫ້ທຸກສິ່ງສຳເລັດ ໂດຍທີ່ບໍ່ໄດ້ເໜັງນິ້ວມື; ເຮົາໃຊ້ແຕ່ພຣະທຳຂອງເຮົາເທົ່ານັ້ນ. ແລ້ວນີ້ກໍແມ່ນບ່ອນທີ່ມີອຳນາດອັນໄພສານຂອງເຮົາ. ໃນພຣະທຳຂອງເຮົາ, ບໍ່ມີໃຜສາມາດຊອກຫາແຫຼ່ງທີ່ມາ ແລະ ຈຸດປະສົງຂອງສິ່ງທີ່ເຮົາກ່າວ. ຜູ້ຄົນບໍ່ສາມາດບັນລຸສິ່ງນີ້ ແລະ ພວກເຂົາສາມາດກະທຳການ ໃນຂະນະທີ່ຕິດຕາມການນຳພາຂອງເຮົາເທົ່ານັ້ນ ແລະ ເຮັດທຸກສິ່ງໃຫ້ສອດຄ່ອງກັບຄວາມປະສົງຂອງເຮົາ ຕາມຄວາມຊອບທຳຂອງເຮົາ ເຊິ່ງເຮັດໃຫ້ຄອບຄົວຂອງເຮົາມີຄວາມຊອບທຳ ແລະ ຄວາມສະຫງົບ, ມີຊີວິດຕະຫຼອດການ ແລະ ໝັ້ນຄົງ ແລະ ບໍ່ຫວັ່ນໄຫວຊົ່ວນິລັນດອນ.

ການພິພາກສາຂອງເຮົາແມ່ນມາເຖິງທຸກຄົນ, ພຣະດຳລັດແຫ່ງການປົກຄອງຂອງເຮົາສຳຜັດທຸກຄົນ ແລະ ພຣະທຳຂອງເຮົາ ແລະ ຕົວເຮົາແມ່ນຖືກເປີດເຜີຍຕໍ່ທຸກຄົນ. ນີ້ແມ່ນເວລາສຳລັບພາລະກິດທີ່ຍິ່ງໃຫຍ່ຂອງພຣະວິນຍານຂອງເຮົາ (ໃນເວລານີ້, ຜູ້ທີ່ຈະໄດ້ຮັບພອນ ແລະ ຜູ້ທີ່ຈະທົນທຸກກັບຄວາມໂຊກຮ້າຍແມ່ນຖືກຈຳແນກອອກຈາກກັນ). ທັນທີທີ່ມີການກ່າວພຣະທຳຂອງເຮົາ, ເຮົາກໍໄດ້ຈຳແນກຜູ້ທີ່ຈະໄດ້ຮັບພອນ ແລະ ຜູ້ທີ່ຈະທົນທຸກກັບຄວາມໂຊກຮ້າຍ. ທັງໝົດນີ້ແມ່ນຊັດເຈນ ແລະ ເຮົາສາມາດເຫັນມັນໝົດພາຍໃນແວບດຽວ. (ເຮົາກຳລັງກ່າວສິ່ງນີ້ກ່ຽວກັບຄວາມເປັນມະນຸດຂອງເຮົາ; ສະນັ້ນ, ພຣະທຳເຫຼົ່ານີ້ຈຶ່ງບໍ່ຂັດກັບການກຳນົດລ່ວງໜ້າ ແລະ ການຄັດເລືອກຂອງເຮົາ). ເຮົາຕະເວນໄປທົ່ວພູເຂົາ ແລະ ແມ່ນໍ້າ ແລະ ໃນທ່າມກາງສິ່ງທັງປວງ, ຂ້າມອາວະກາດຂອງຈັກກະວານ, ສັງເກດເບິ່ງ ແລະ ຊຳລະລ້າງທຸກບ່ອນ ເພື່ອວ່າ ສະຖານທີ່ງບໍ່ສະອາດເຫຼົ່ານັ້ນ ແລະ ດິນແດນທີ່ຫຍຸ້ງເຫຍີງເຫຼົ່ານັ້ນຈະຫາຍໄປ ແລະ ຖືກເຜົາເປັນຄວາມວ່າງເປົ່າເນື່ອງຈາກພຣະທຳຂອງເຮົາ. ສຳລັບເຮົາແລ້ວ, ທຸກສິ່ງແມ່ນງ່າຍດາຍ. ຖ້າຕອນນີ້ແມ່ນເວລາທີ່ເຮົາໄດ້ກຳນົດລ່ວງໜ້າເພື່ອການທຳລາຍລ້າງໂລກ, ເຮົາຈະສາມາດກືນມັນດ້ວຍການກ່າວພຣະທຳຂໍ້ດຽວ. ຢ່າງໃດກໍຕາມ, ຕອນນີ້ຍັງບໍ່ແມ່ນເວລາເທື່ອ. ທຸກຢ່າງຕ້ອງມີຄວາມພ້ອມກ່ອນເຮົາຈະປະຕິບັດພາລະກິດ ເພື່ອວ່າ ແຜນການຂອງເຮົາຈະບໍ່ຖືກລົບກວນ ແລະ ການຄຸ້ມຄອງຂອງເຮົາຈະບໍ່ຖືກຂັດຂວາງ. ເຮົາຮູ້ວິທີເຮັດສິ່ງນີ້ຢ່າງເໝາະສົມ: ເຮົາມີສະຕິປັນຍາຂອງເຮົາ ແລະ ເຮົາມີການຈັດກຽມຂອງເຮົາເອງ. ຜູ້ຄົນຕ້ອງບໍ່ເໜັງຕິງແມ່ນແຕ່ນິ້ວດຽວ; ຈົ່ງລະວັງຕົວເພື່ອບໍ່ໃຫ້ຖືກຂ້າດ້ວຍມືຂອງເຮົາ. ສິ່ງນີ້ແມ່ນໄດ້ແຕະຕ້ອງພຣະດຳລັດແຫ່ງການປົກຄອງຂອງເຮົາແລ້ວ.

ຈາກສິ່ງນີ້ ຄົນເຮົາແມ່ນສາມາດເຫັນເຖິງຄວາມໂຫດຮ້າຍຂອງພຣະດຳລັດແຫ່ງການປົກຄອງຂອງເຮົາ ພ້ອມກັບຫຼັກການທີ່ຢູ່ເບື້ອງຫຼັງພຣະດຳລັດແຫ່ງການປົກຄອງເຫຼົ່ານັ້ນ ເຊິ່ງມີສອງດ້ານ: ໃນດ້ານໜຶ່ງ, ເຮົາຂ້າທຸກຄົນທີ່ບໍ່ສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ຜູ້ທີ່ລະເມີດພຣະດຳລັດແຫ່ງການປົກຄອງຂອງເຮົາ; ໃນອີກດ້ານ, ເຮົາສາບແຊ່ງທຸກຄົນທີ່ລະເມີດພຣະດຳລັດແຫ່ງການປົກຄອງຂອງເຮົາໃນຄວາມໂກດຮ້າຍຂອງເຮົາ. ສອງພາກສ່ວນເຫຼົ່ານີ້ແມ່ນຂາດບໍ່ໄດ້ ແລະ ແມ່ນຫຼັກການບໍລິຫານຢູ່ເບື້ອງຫຼັງຂອງພຣະດຳລັດແຫ່ງການປົກຄອງຂອງເຮົາ. ທຸກຄົນແມ່ນຖືກຈັດການຕາມສອງຫຼັກການເຫຼົ່ານີ້ ໂດຍບໍ່ມີອາລົມ ບໍ່ວ່າຄົນເຮົາຈະຈົງຮັກພັກດີຫຼາຍສໍ່າໃດກໍຕາມ. ສິ່ງນີ້ແມ່ນພຽງພໍທີ່ຈະສະແດງໃຫ້ເຫັນເຖິງຄວາມຊອບທຳຂອງເຮົາ, ຄວາມສະຫງ່າຜ່າເຜີຍຂອງເຮົາ ແລະ ຄວາມໂກດຮ້າຍຂອງເຮົາ ເຊິ່ງຈະເຜົາທຸກສິ່ງທີ່ເປັນຂອງແຜ່ນດິນໂລກ, ທຸກສິ່ງທີ່ເປັນທາງໂລກ ແລະ ທຸກສິ່ງທີ່ບໍ່ສອດຄ່ອງກັບຄວາມປະສົງຂອງເຮົາ. ໃນພຣະທຳຂອງເຮົາແມ່ນມີຄວາມລຶກລັບທີ່ຍັງລີ້ລັບຢູ່ ແລະ ມີຄວາມລຶກລັບທີ່ຖືກເປີດເຜີຍໃນພຣະທຳຂອງເຮົາເຊັ່ນກັນ. ສະນັ້ນ, ຕາມແນວຄິດຂອງມະນຸດ ແລະ ໃນຄວາມຄິດຂອງມະນຸດ, ພຣະທຳຂອງເຮົາແມ່ນບໍ່ສາມາດຈະເຂົ້າໃຈໄດ້ຕະຫຼອດ ແລະ ຫົວໃຈຂອງເຮົາກໍບໍ່ສາມາດຢັ່ງເຖິງໄດ້ຕະຫຼອດ. ນັ້ນກໍຄື ເຮົາຕ້ອງຖິ້ມມະນຸດອອກຈາກແນວຄິດ ແລະ ຄວາມຄິດຂອງພວກເຂົາ. ນີ້ແມ່ນສິ່ງທີ່ສຳຄັນທີ່ສຸດຂອງແຜນການຄຸ້ມຄອງຂອງເຮົາ. ເຮົາຕ້ອງເຮັດມັນດ້ວຍວິທີນີ້ ເພື່ອຮັບເອົາບຸດຊາຍກົກຂອງເຮົາ ແລະ ເພື່ອປະຕິບັດສິ່ງຕ່າງໆທີ່ເຮົາຕ້ອງການປະຕິບັດໃຫ້ສຳເລັດ.

ໄພພິບັດຂອງໂລກແມ່ນໃຫຍ່ຂຶ້ນໃນແຕ່ລະມື້ ແລະ ໄພພິບັດທີ່ໃຫ້ຄວາມເສຍຫາຍຫຼາຍທີ່ສຸດກໍຍິ່ງຮ້າຍແຮງຫຼາຍຂຶ້ນໃນເຮືອນຂອງເຮົາ. ຜູ້ຄົນບໍ່ມີບ່ອນລີ້ແທ້ໆ, ບໍ່ມີບ່ອນປົດບັງຕົວເອງ. ຍ້ອນການປ່ຽນແປງກຳລັງເກີດຂຶ້ນໃນຕອນນີ້, ຜູ້ຄົນຈຶ່ງບໍ່ຮູ້ວ່າ ພວກເຂົາຈະຜ່ານຂັ້ນຕອນຕໍ່ໄປຂອງພວກເຂົາຢູ່ບ່ອນໃດ. ສິ່ງນີ້ຈະກາຍເປັນສິ່ງທີ່ເຫັນໄດ້ຊັດເຈນຫຼັງຈາກການພິພາກສາຂອງເຮົາເທົ່ານັ້ນ. ຈົ່ງຈື່ໄວ້! ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຕ່າງໆຂອງພາລະກິດຂອງເຮົາ ແລະ ມັນແມ່ນວິທີທີ່ເຮົາປະຕິບັດພາລະກິດ. ເຮົາຈະປອບໃຈບຸດຊາຍກົກຂອງເຮົາເທື່ອລະຄົນ ແລະ ຍົກພວກເຂົາຂຶ້ນເທື່ອລະບາດກ້າວ; ສ່ວນຜູ້ເຮັດການບໍລິການ, ເຮົາຈະກຳຈັດ ແລະ ປະຖິ້ມພວກເຂົາທຸກຄົນເທື່ອລະຄົນ. ນີ້ແມ່ນສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງເຮົາ. ບໍ່ວ່າຢ່າງໃດກໍຕາມ, ຜູ້ເຮັດການບໍລິການຈະຖືກເປີດໂປງ ແລະ ບຸດຊາຍກົກຂອງເຮົາກໍຈະຖືກເປີດເຜີຍເຊັ່ນກັນ. (ສຳລັບເຮົາແລ້ວ, ສິ່ງນີ້ແມ່ນງ່າຍຫຼາຍ. ຫຼັງຈາກທີ່ພວກເຂົາໄດ້ຍິນພຣະທຳຂອງເຮົາ, ຜູ້ເຮັດການບໍລິການທຸກຄົນເຫຼົ່ານັ້ນຈະຫົດລົງຢູ່ຕໍ່ໜ້າການພິພາກສາ ແລະ ຄຳຂູ່ຈາກພຣະທຳຂອງເຮົາເທື່ອລະໜ້ອຍ ແລະ ບຸດຊາຍກົກຂອງເຮົາເທົ່ານັ້ນທີ່ຈະຍັງຄົງຢູ່. ນີ້ບໍ່ແມ່ນສິ່ງທີ່ເຮັດດ້ວຍຄວາມສະໝັກໃຈ ແລະ ມັນບໍ່ແມ່ນສິ່ງທີ່ມະນຸດຈະສາມາດປ່ຽນໄດ້; ກົງກັນຂ້າມ, ນີ້ແມ່ນການປະຕິບັດພາລະກິດຂອງພຣະວິນຍານຂອງເຮົາດ້ວຍຕົວເອງ). ນີ້ບໍ່ແມ່ນເຫດການທີ່ຫ່າງໄກ ແລະ ໃນລະດັບໜຶ່ງ ເຈົ້າກໍຄວນຈະສາມາດເບິ່ງເຫັນມັນຈາກພາຍໃນໄລຍະການປະຕິບັດພາລະກິດຂອງເຮົາ ແລະ ພຣະທຳຂອງເຮົາ. ເປັນຫຍັງເຮົາຈຶ່ງກ່າວຫຼາຍ ແລະ ແກ່ນແທ້ທີ່ຄາດເດົາບໍ່ໄດ້ຂອງການກ່າວພຣະທຳຂອງເຮົາແມ່ນເປັນສິ່ງທີ່ຜູ້ຄົນບໍ່ສາມາດຢັ່ງເຖິງ. ເຮົາກ່າວກັບບຸດຊາຍກົກຂອງເຮົາດ້ວຍ

ນໍ້າສຽງທີ່ປອບໃຈ, ມີຄວາມເມດຕາ ແລະ ຄວາມຮັກ (ເພາະວ່າ ເຮົາໃຫ້ແສງສະຫວ່າງແກ່ຜູ້ຄົນເຫຼົ່ານີ້ ສະເໝີ ແລະ ເຮົາຈະບໍ່ປະພວກເຂົາໄວ້ ເນື່ອງຈາກເຮົາໄດ້ກໍານົດໃຫ້ພວກເຂົາລ່ວງໜ້າແລ້ວ) ໃນຂະນະທີ່ເຮົາປະຕິບັດກັບຜູ້ຄົນອື່ນ ທີ່ນອກເໜືອຈາກບຸດຊາຍກົກຂອງເຮົາ ດ້ວຍການພິພາກສາທີ່ຮ້າຍແຮງ, ດ້ວຍການຂົ່ມຂູ່ ແລະ ດ້ວຍການຂູ່ຂວັນ ໂດຍເຮັດໃຫ້ພວກເຂົາຮູ້ສຶກຕົກໃຈຕະຫຼອດເວລາຈົນຮອດຂັ້ນທີ່ເສັ້ນປະສາດຂອງພວກເຂົາເຮັດວຽກຢູ່ຕະຫຼອດເວລາ. ເມື່ອສະຖານະການພັດທະນາໄດ້ໃນລະດັບໃດໜຶ່ງ, ພວກເຂົາກໍຈະພົ້ນຈາກສະພາບການນີ້ (ເມື່ອເຮົາທໍາລາຍໂລກ, ຜູ້ຄົນເຫຼົ່ານີ້ກໍຈະຢູ່ໃນຂຸມເລິກ) ແຕ່ພວກເຂົາຈະບໍ່ມີວັນໜີຈາກມືແຫ່ງການພິພາກສາຂອງເຮົາ ຫຼື ເປັນອິດສະຫຼະຈາກສະຖານະການນີ້ໄດ້. ນີ້ກໍແມ່ນການພິພາກສາຂອງພວກເຂົາ; ນີ້ແມ່ນການຂ້ຽນຕີຂອງພວກເຂົາ. ໃນມື້ທີ່ຊາວຕ່າງຊາດມາເຖິງ, ເຮົາຈະເປີດໂປງຜູ້ຄົນເຫຼົ່ານີ້ເທື່ອລະຄົນ. ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຕ່າງໆຂອງພາລະກິດຂອງພຣະເຈົ້າ. ຕອນນີ້ພວກເຈົ້າເຂົ້າໃຈເຈດຕະນາ ທີ່ຢູ່ເບື້ອງຫຼັງການກ່າວພຣະທໍາເຫຼົ່ານັ້ນຂອງເຮົາກ່ອນໜ້ານັ້ນແລ້ວບໍ? ໃນຄວາມເຫັນຂອງເຮົາ, ສິ່ງທີ່ບໍ່ໄດ້ຖືກເຮັດໃຫ້ສໍາເລັດກໍຍັງແມ່ນສິ່ງທີ່ໄດ້ຖືກເຮັດໃຫ້ສໍາເລັດ ແຕ່ສິ່ງທີ່ໄດ້ຖືກເຮັດໃຫ້ສໍາເລັດບໍ່ຈໍາເປັນຕ້ອງແມ່ນສິ່ງທີ່ໄດ້ຖືກບັນລຸ. ນີ້ກໍຍ້ອນວ່າ ເຮົາມີສະຕິປັນຍາຂອງເຮົາ ແລະ ວິທີທາງໃນການປະຕິບັດພາລະກິດຂອງເຮົາ ເຊິ່ງມະນຸດພຽງແຕ່ບໍ່ສາມາດເຂົ້າໃຈໄດ້. ເມື່ອເຮົາບັນລຸຜົນດ້ວຍຂັ້ນຕອນນີ້ (ເມື່ອເຮົາໄດ້ເປີດໂປງຄົນຊົ່ວທຸກຄົນທີ່ຕໍ່ຕ້ານເຮົາ), ເຮົາຈະເລີ່ມຂັ້ນຕອນຕໍ່ໄປ ເນື່ອງຈາກຄວາມປະສົງຂອງເຮົາແມ່ນບໍ່ສາມາດຖືກກີດຂວາງໄດ້ ແລະ ບໍ່ມີຜູ້ໃດກ້າທີ່ຈະຂັດຂວາງແຜນການຄຸ້ມຄອງຂອງເຮົາ ແລະ ບໍ່ມີສິ່ງໃດກ້າຕໍ່ຕ້ານ. ທຸກຢ່າງຕ້ອງຫຼີກທາງ! ລູກໆຂອງມັງກອນແດງຜູ້ຍິ່ງໃຫຍ່ເອີຍ, ຈົ່ງຟັງເຮົາ! ເຮົາມາຈາກພູເຂົາຊີໂອນ ແລະ ກາຍເປັນເນື້ອໜັງໃນໂລກເພື່ອຮັບເອົາບຸດຊາຍກົກຂອງເຮົາ, ເພື່ອເຮັດໃຫ້ບິດາຂອງພວກເຈົ້າອັບອາຍ (ພຣະທໍາເຫຼົ່ານີ້ແມ່ນແນໃສ່ລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່), ເພື່ອໃຫ້ການສະໜັບສະໜູນແກ່ບຸດຊາຍກົກຂອງເຮົາ ແລະ ເພື່ອເຮັດໃຫ້ສິ່ງທີ່ຜິດທີ່ຖືກກະທໍາຕໍ່ບຸດຊາຍກົກຂອງເຮົາຖືກຕ້ອງ. ສະນັ້ນ, ຈົ່ງຢ່າມີຄວາມປ່າເຖື່ອນອີກ; ເຮົາຈະປ່ອຍໃຫ້ບຸດຊາຍກົກຂອງເຮົາຈັດການກັບພວກເຈົ້າ. ໃນອະດີດ, ບຸດຊາຍຂອງເຮົາຖືກຂົ່ມເຫັງ ແລະ ຖືກກົດຂີ່ ແລະ ໃນເມື່ອພຣະບິດາແກວ່ງພະລັງອໍານາດເພື່ອບຸດຊາຍຂອງພຣະອົງ, ບຸດຊາຍຂອງເຮົາກໍຈະກັບຄືນສູ່ອ້ອມກອດທີ່ຮັກແພງຂອງເຮົາ ໂດຍທີ່ຈະບໍ່ຖືກຂົ່ມເຫັງ ແລະ ກົດຂີ່ອີກຕໍ່ໄປ. ເຮົາບໍ່ໄດ້ມີຄວາມບໍ່ຊອບທໍາ; ນີ້ສະແດງໃຫ້ເຫັນເຖິງຄວາມຊອບທໍາຂອງເຮົາ ແລະ ມັນແມ່ນ “ຄວາມຮັກທີ່ມີຕໍ່ຜູ້ຄົນເຫຼົ່ານັ້ນທີ່ເຮົາຮັກ ແລະ ຄວາມກຽດຊັງທີ່ມີຕໍ່ຜູ້ຄົນເຫຼົ່ານັ້ນທີ່ເຮົາກຽດຊັງ” ຢ່າງແທ້ຈິງ. ຖ້າພວກເຈົ້າເວົ້າວ່າ ເຮົາບໍ່ຊອບທໍາ, ພວກເຈົ້າກໍຄວນຟ້າວ ແລະ ອອກໄປ. ຈົ່ງຢ່າໄຮ້ຢາງອາຍ ແລະ ເອົາປຽບຜູ້ອື່ນໃນເຮືອນຂອງເຮົາ. ເຈົ້າຄວນກັບໄປເຮືອນຂອງເຈົ້າຢ່າງຮີບດ່ວນ ເພື່ອວ່າ ເຮົາຈະບໍ່ໄດ້ເຫັນເຈົ້າອີກຕໍ່ໄປ. ຂຸມເລິກແມ່ນຈຸດໝາຍປາຍທາງຂອງພວກເຈົ້າ ແລະ ນັ້ນຈະເປັນບ່ອນທີ່ພວກເຈົ້າຈະພັກຜ່ອນ. ຖ້າພວກເຈົ້າຢູ່ໃນເຮືອນຂອງເຮົາ, ມັນກໍຈະບໍ່ມີບ່ອນສໍາລັບພວກເຈົ້າ ຍ້ອນວ່າ ພວກເຈົ້າແມ່ນສັດຮ້າຍທີ່ເປັນພາລະ; ພວກເຈົ້າແມ່ນເຄື່ອງມືທີ່ເຮົາໃຊ້. ເມື່ອເຮົາບໍ່ໃຊ້ພວກເຈົ້າອີກຕໍ່ໄປ, ເຮົາກໍຈະໂຍນພວກເຈົ້າເຂົ້າສູ່ກອງໄຟເພື່ອໃຫ້ເຜົາຜານພວກເຈົ້າ. ນີ້ແມ່ນ

ພຣະກຳລັດແຫ່ງການປົກຄອງຂອງເຮົາ; ເຮົາຕ້ອງປະຕິບັດສິ່ງນີ້ດ້ວຍວິທີນີ້ ແລະ ມີແຕ່ສິ່ງນີ້ເທົ່ານັ້ນ ທີ່ສະແດງເຖິງວິທີການທີ່ເຮົາປະຕິບັດພາລະກິດ ແລະ ເປີດເຜີຍຄວາມຊອບທຳຂອງເຮົາ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາ. ຍິ່ງໄປກວ່ານັ້ນ, ດ້ວຍວິທີນີ້ເທົ່ານັ້ນ ບຸດຊາຍກົກຂອງເຮົາຈຶ່ງຈະຖືກອະນຸຍາດໃຫ້ປົກຄອງພ້ອມດ້ວຍອຳນາດກັບເຮົາ.

# ບົດທີ 104

ທຸກຄົນ, ເຫດການ ແລະ ສິ່ງຕ່າງໆທີ່ຢູ່ນອກຕົວເຮົາຈະຜ່ານໄປສູ່ຄວາມວ່າງເປົ່າ, ໃນຂະນະທີ່ທຸກຄົນ, ເຫດການ ແລະ ສິ່ງຕ່າງໆທີ່ຢູ່ພາຍໃນຕົວເຮົາຈະໄດ້ຮັບທຸກສິ່ງຈາກເຮົາ ແລະ ເຂົ້າໄປສູ່ຄວາມສະຫງ່າລາສີຮ່ວມກັບເຮົາ, ເຂົ້າໄປຢູ່ເທິງພູເຂົາຊີໂອນຂອງເຮົາ, ເຂົ້າໄປສູ່ບ່ອນພັກເຊົາຂອງເຮົາ ແລະ ຢູ່ຮ່ວມກັບເຮົາຕະຫຼອດໄປ. ເຮົາໄດ້ສ້າງທຸກສິ່ງໃນເບື້ອງຕົ້ນ ແລະ ເຮົາຈະເຮັດໃຫ້ພາລະກິດຂອງເຮົາສຳເລັດລົງໃນຕອນສຸດທ້າຍ. ພ້ອມນັ້ນ ເຮົາຍັງຈະດຳລົງຢູ່ ແລະ ປົກຄອງເໝືອນດັ່ງກະສັດຕະຫຼອດໄປ. ໃນລະຫວ່າງເວລານັ້ນ, ເຮົາຍັງຈະນຳພາ ແລະ ຄວບຄຸມຈັກກະວານທັງໝົດອີກດ້ວຍ. ບໍ່ມີໃຜສາມາດຍຶດເອົາສິດອຳນາດຂອງເຮົາໄປໄດ້, ເພາະວ່າເຮົາຄືພຣະເຈົ້າອົງດຽວ. ຍິ່ງໄປກວ່ານັ້ນ ເຮົາຍັງມີອຳນາດທີ່ຈະສົ່ງຕໍ່ສິດອຳນາດຂອງເຮົາໃຫ້ແກ່ລູກຊາຍກົກຂອງເຮົາ ເພື່ອວ່າພວກເຂົາຈະຂຶ້ນຄອງລາດຢູ່ຄຽງຂ້າງເຮົາ. ສິ່ງເຫຼົ່ານີ້ຈະມີຢູ່ຊົ່ວນິລັນດອນ ແລະ ບໍ່ສາມາດປ່ຽນແປງໄດ້. ນີ້ຄືດຳລັດການບໍລິຫານຂອງເຮົາ. (ບ່ອນໃດກໍຕາມທີ່ເຮົາສົນທະນາເຖິງດຳລັດການບໍລິຫານຂອງເຮົາ ເຮົາກຳລັງໝາຍເຖິງສິ່ງທີ່ເກີດຂຶ້ນໃນອານາຈັກຂອງເຮົາ ແລະ ສິ່ງທີ່ຈະມີຢູ່ຕະຫຼອດໄປ ແລະ ບໍ່ສາມາດປ່ຽນແປງໄດ້). ທຸກຄົນຕ້ອງເຊື່ອໝັ້ນຢ່າງໝົດໃຈ ແລະ ຕ້ອງເຫັນອຳນາດອັນຍິ່ງໃຫຍ່ຂອງເຮົາໃນຜູ້ຄົນທີ່ເຮົາຮັກ. ບໍ່ມີໃຜສາມາດເຮັດໃຫ້ພຣະນາມຂອງເຮົາເສຍຊື່ສຽງໄດ້; ຜູ້ໃດເຮັດໃຫ້ຊື່ສຽງຂອງເຮົາເສື່ອມເສຍຕ້ອງອອກໄປຈາກບ່ອນນີ້! ບໍ່ແມ່ນວ່າເຮົາບໍ່ມີຄວາມເມດຕາ, ແຕ່ຍ້ອນວ່າເຈົ້າບໍ່ມີຄວາມຊອບທຳ. ຖ້າເຈົ້າລະເມີດຕໍ່ການຕີສອນຂອງເຮົາ ແລ້ວເຮົາກໍຈະຈັດການເຈົ້າ ແລະ ເຮັດໃຫ້ເຈົ້າດັບສູນໄປຊົ່ວນິລັນດອນ. (ແນ່ນອນ, ທັງໝົດນີ້ແມ່ນແນໃສ່ຄົນທີ່ບໍ່ແມ່ນລູກຊາຍກົກຂອງເຮົາ). ເຮືອນຂອງເຮົາບໍ່ຕ້ອນຮັບຂີ້ເຫຍື້ອດັ່ງກ່າວ, ດັ່ງນັ້ນ ຈົ່ງຟ້າວອອກໄປຈາກບ່ອນນີ້ໂດຍໄວ! ຢ່າໄດ້ຊັກຊ້ານາທີດຽວ ຫຼື ແມ່ນແຕ່ວິນາທີດຽວ! ເຈົ້າຕ້ອງປະຕິບັດສິ່ງທີ່ເຮົາກ່າວ, ບໍ່ດັ່ງນັ້ນ ເຮົາຈະທຳລາຍເຈົ້າດ້ວຍພຣະທຳຄຳດຽວ. ທາງທີ່ດີເຈົ້າບໍ່ຕ້ອງລັງເລໃຈ ແລະ ເຈົ້າບໍ່ຕ້ອງພະຍາຍາມຫຼອກລວງ. ເມື່ອຢູ່ຕໍ່ໜ້າເຮົາ, ເຈົ້າສ້າງເລື່ອງໄຮ້ສາລະ ແລະ ເວົ້າຕົວະຕໍ່ໜ້າເຮົາ. ຈົ່ງໜີໄປໄກໆ! ເຮົາມີເວລາຈຳກັດສຳລັບເລື່ອງດັ່ງກ່າວ. (ເມື່ອເຖິງເວລາຮັບໃຊ້ຜູ້ຄົນເຫຼົ່ານີ້ກໍຈະຮັບໃຊ້ ແລະ ເມື່ອເຖິງເວລາຈາກໄປ ພວກເຂົາກໍຈະຈາກໄປ. ເຮົາປະຕິບັດສິ່ງຕ່າງໆດ້ວຍສະຕິປັນຍາ, ບໍ່ເຄີຍມີແມ່ນແຕ່ນາທີດຽວ ຫຼື ວິນາທີດຽວທີ່ນອກເວລາ; ບໍ່ເຄີຍມີແມ່ນແຕ່ສ້ຽວວິນາທີດຽວ. ທຸກການກະທຳຂອງເຮົາແມ່ນຊອບທຳ ແລະ ຖືກຕ້ອງທັງໝົດ). ຢ່າງໃດກໍຕາມ ສຳລັບລູກຊາຍກົກຂອງເຮົາ, ເຮົາອົດທົນສະເໝີ ແລະ ຄວາມຮັກຂອງເຮົາທີ່ມີຕໍ່ພວກເຈົ້າແມ່ນເປັນນິດ, ເຮັດໃຫ້ພວກເຈົ້າໄດ້ຮັບພອນທີ່ດີ ແລະ ມີຊີວິດນິລັນດອນຮ່ວມກັບເຮົາ. ໃນຂະນະດຽວກັນ ພວກເຈົ້າຈະບໍ່ເຄີຍພົບກັບຄວາມພ່າຍແພ້ ຫຼື ໄດ້ຮັບການພິພາກສາ. (ສິ່ງນີ້ໝາຍເຖິງ ເມື່ອພວກເຈົ້າເລີ່ມຮັບພອນຕ່າງໆ). ນີ້ແມ່ນພອນ ແລະ ຄຳສັນຍາຢ່າງບໍ່ມີວັນສິ້ນສຸດທີ່ເຮົາສັນຍາໄວ້ຕໍ່ບັນດາລູກຊາຍກົກຂອງເຮົາເມື່ອເຮົາສ້າງໂລກ. ພວກເຈົ້າຄວນເຫັນຄວາມຊອບທຳຂອງເຮົາຢູ່ໃນນັ້ນ: ເຮົາຮັກບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າແລ້ວ ແລະ ເຮົາຊັງບັນດາຜູ້ທີ່ເຮົາໄດ້ປະຖິ້ມ ແລະ ໂຍນອອກຕະຫຼອດໄປເປັນນິດ.

ໃນຖານະເປັນລູກຊາຍກົກຂອງເຮົາ, ພວກເຈົ້າທັງໝົດຄວນຍຶດໝັ້ນໃນໜ້າທີ່ຂອງຕົນ ແລະ ມີຄວາມຕັ້ງໝັ້ນໃນຕຳແໜ່ງຂອງຕົນ. ຈົ່ງເປັນໝາກໄມ້ທີ່ສຸກກ່ອນໝູ່ທີ່ຖືກຍົກຂຶ້ນມາຢູ່ຕໍ່ໜ້າເຮົາ ແລະ ຍອມຮັບການກວດສອບສ່ວນຕົວຂອງເຮົາ ເພື່ອວ່າພວກເຈົ້າຈະສາມາດມີຊີວິດຢູ່ໄດ້ໃນພາບສະທ້ອນລັດສະໝີຂອງເຮົາ ແລະ ເພື່ອວ່າແສງລັດສະໝີຂອງເຮົາຈະໄດ້ສ່ອງໃສ່ໃບໜ້າຂອງພວກເຈົ້າ, ເພື່ອວ່າຄຳເວົ້າຂອງເຮົາຈະໄດ້ກະຈາຍອອກຈາກປາກຂອງພວກເຈົ້າ, ເພື່ອວ່າອານາຈັກຂອງເຮົາຈະໄດ້ປົກຄອງໂດຍພວກເຈົ້າ ແລະ ກໍເພື່ອວ່າຄົນຂອງເຮົາຈະໄດ້ປົກຄອງໂດຍພວກເຈົ້າ. ໃນນີ້ເຮົາໄດ້ກ່າວເຖິງ "ໝາກໄມ້ທີ່ສຸກກ່ອນໝູ່" ແລະ ຍັງມີຄຳວ່າ "ຍົກຂຶ້ນມາ" ອີກດ້ວຍ. "ໝາກໄມ້ທີ່ສຸກກ່ອນໝູ່" ແມ່ນຫຍັງ? ອີງຕາມຄວາມຄິດຂອງຄົນ, ພວກເຂົາຄິດວ່າມັນແມ່ນກຸ່ມຄົນທຳອິດທີ່ຖືກຍົກຂຶ້ນມາ ຫຼື ຜູ້ມີໄຊຊະນະ ຫຼື ຄົນທີ່ເປັນລູກຊາຍກົກ. ທັງໝົດນີ້ແມ່ນບໍ່ຖືກຕ້ອງ ແລະ ເປັນການຕີຄວາມໝາຍຜິດກ່ຽວກັບພຣະທຳຂອງເຮົາ. ໝາກໄມ້ທີ່ສຸກກ່ອນໝູ່ ແມ່ນຄົນທີ່ໄດ້ຮັບການເປີດເຜີຍຈາກເຮົາ ແລະ ຜູ້ທີ່ໄດ້ຮັບສິດອຳນາດຈາກເຮົາ. ຄຳທີ່ວ່າ "ສຸກກ່ອນໝູ່" ໝາຍເຖິງຢູ່ໃນການຄອບຄອງຂອງເຮົາ ແລະ ຖືກກຳນົດໄວ້ລ່ວງໜ້າ ແລະ ຖືກເລືອກໂດຍເຮົາ. "ສຸກກ່ອນໝູ່" ບໍ່ໄດ້ໝາຍເຖິງ "ລຳດັບທຳອິດ". "ໝາກໄມ້ສຸກກ່ອນໝູ່" ບໍ່ແມ່ນວັດຖຸສິ່ງຂອງທີ່ເຫັນດ້ວຍສາຍຕາຂອງມະນຸດ. ທີ່ເອີ້ນວ່າ "ໝາກໄມ້" ໝາຍເຖິງສິ່ງທີ່ສົ່ງກິ່ນຫອມອອກມາ (ນີ້ແມ່ນຄວາມໝາຍປຽບທຽບ); ນັ້ນກໍຄື ໝາຍເຖິງບັນດາຜູ້ທີ່ສາມາດໃຊ້ຊີວິດຢູ່ກັບເຮົາ, ສະແດງໃຫ້ເຮົາເຫັນ ແລະ ຢູ່ກັບເຮົາຕະຫຼອດໄປ. ເມື່ອເຮົາກ່າວກ່ຽວກັບ "ໝາກໄມ້" ແມ່ນເຮົາໝາຍເຖິງລູກຊາຍ ແລະ ຄົນຂອງເຮົາທັງໝົດ, ສ່ວນ "ໝາກໄມ້ສຸກກ່ອນໝູ່" ແມ່ນໝາຍເຖິງລູກຊາຍກົກທີ່ຈະປົກຄອງຢູ່ຄຽງຂ້າງເຮົາດັ່ງກະສັດ. ເພາະສະນັ້ນ, "ສຸກກ່ອນໝູ່" ຄວນຖືກອະທິບາຍວ່າ ເປັນຜູ້ຮັບສິດອຳນາດ; ນັ້ນຄືຄວາມໝາຍທີ່ແທ້ຈິງຂອງມັນ. "ຖືກຍົກຂຶ້ນມາ" ບໍ່ໄດ້ໝາຍເຖິງການຖືກຍົກຈາກບ່ອນຕ່ຳຂຶ້ນໄປບ່ອນສູງແບບທີ່ຄົນອາດຈິນຕະນາການ; ນັ້ນແມ່ນຄວາມເຂົ້າໃຈຜິດຢ່າງໃຫຍ່ຫຼວງ. "ຖືກຍົກຂຶ້ນມາ" ແມ່ນໝາຍເຖິງການກຳນົດໄວ້ລ່ວງໜ້າ ແລະ ການຄັດເລືອກຂອງເຮົາ. ມັນແນໃສ່ບັນດາຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ໄດ້ເລືອກໄວ້ທັງໝົດ. ທຸກຄົນທີ່ຖືກຍົກຂຶ້ນຄືຄົນທີ່ໄດ້ຮັບສະຖານະເປັນລູກຊາຍກົກ ຫຼື ລູກຊາຍ ຫຼື ຄົນຂອງພຣະເຈົ້າ. ນີ້ແມ່ນສິ່ງທີ່ບໍ່ສອດຄ່ອງທີ່ສຸດກັບຄວາມຄິດຂອງຄົນ. ຜູ້ທີ່ຈະໄດ້ຮັບການແບ່ງປັນຢູ່ໃນເຮືອນຂອງເຮົາໃນອະນາຄົດແມ່ນຜູ້ທີ່ໄດ້ຖືກຍົກຂຶ້ນມາຢູ່ຕໍ່ໜ້າເຮົາ. ນີ້ແມ່ນເລື່ອງແທ້ແນ່ນອນ, ບໍ່ເຄີຍປ່ຽນແປງ ແລະ ບໍ່ສາມາດໂຕ້ຖຽງໄດ້. ມັນແມ່ນການຕອບໂຕ້ຕໍ່ຊາຕານ. ທຸກຄົນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າຈະຖືກຍົກຂຶ້ນມາຢູ່ຕໍ່ໜ້າເຮົາ.

ຄົນໃດໜຶ່ງຈະອະທິບາຍຄຳວ່າ "ແກສັກສິດ" ວ່າແນວໃດ? ຄວາມເຂົ້າໃຈຂອງພວກເຈົ້າກ່ຽວກັບສິ່ງນີ້ແມ່ນຫຍັງ? ເປັນຫຍັງຈຶ່ງເວົ້າວ່າສັກສິດ ແລະ ມັນຈຶ່ງມີສຽງດັງຂຶ້ນແລ້ວ? ນີ້ຄວນຖືກອະທິບາຍຈາກຂັ້ນຕອນຂອງພາລະກິດຂອງເຮົາ ແລະ ຄວນເຂົ້າໃຈຈາກວິທີການທີ່ເຮົາປະຕິບັດພາລະກິດ. ເມື່ອເວລາການຕັດສິນຂອງເຮົາຖືກເປີດເຜີຍຕໍ່ສາທາລະນະຊົນແມ່ນເວລາທີ່ອຸປະນິໄສຂອງເຮົາຖືກເປີດເຜີຍຕໍ່ທຸກຊາດ ແລະ ທຸກຄົນ. ນັ້ນແມ່ນເວລາທີ່ສຽງແກສັກສິດດັງຂຶ້ນ. ນັ້ນກໍຄື ເຮົາເວົ້າຢູ່ສະເໝີວ່າ

ອຸປະນິໄສຂອງເຮົານັ້ນສັກສິດ ແລະ ບໍ່ສາມາດຖືກລ່ວງເກີນໄດ້, ດັ່ງນັ້ນຄຳວ່າ "ສັກສິດ" ຈຶ່ງຖືກໃຊ້ເພື່ອບັນລະຍາຍຄຳວ່າ "ແກ". ຈາກສິ່ງນີ້ມັນສາມາດພິສູດໄດ້ວ່າ "ແກ" ໝາຍເຖິງອຸປະນິໄສຂອງເຮົາ ແລະ ເປັນຕົວແທນໃນສິ່ງທີ່ເຮົາເປັນ ແລະ ມີ. ນີ້ສາມາດເວົ້າໄດ້ເຊັ່ນກັນວ່າ ການພິພາກສາຂອງເຮົານັ້ນຄືບໜ້າໄປທຸກມື້, ຄວາມໂກດຮ້າຍຂອງເຮົາຖືກປ່ອຍອອກທຸກມື້ ແລະ ການສາບແຊ່ງຂອງເຮົາເກີດຂຶ້ນກັບທຸກສິ່ງທີ່ບໍ່ສອດຄ່ອງກັບອຸປະນິໄສຂອງເຮົາທຸກມື້. ດັ່ງນັ້ນ ມັນສາມາດເວົ້າໄດ້ວ່າ ເວລາການຕັດສິນຂອງເຮົາເລີ່ມຕົ້ນຂຶ້ນແມ່ນເວລາທີ່ສຽງແກສັກສິດດັງກ້ອງຂຶ້ນ ແລະ ມັນກໍຈະສືບຕໍ່ດັງຂຶ້ນທຸກມື້, ໂດຍຈະບໍ່ຢຸດພຽງຊ່ວງເວລາໃດໜຶ່ງ ແລະ ບໍ່ຢຸດແມ່ນແຕ່ນາທີດຽວ ຫຼື ວິນາທີດຽວເລີຍ. ຈາກນີ້ໄປ, ແກສັກສິດຈະສົ່ງສຽງດັງຂຶ້ນເລື້ອຍໆພ້ອມກັບການລົງມາຢ່າງຕໍ່ເນື່ອງຂອງໄພພິບັດຄັ້ງໃຫຍ່. ເວົ້າໄດ້ອີກຢ່າງກໍ່ຄື ມັນ ຄຽງຄູ່ກັບການເປີດເຜີຍການພິພາກສາອັນຊອບທຳຂອງເຮົາ, ອຸປະນິໄສຂອງເຮົາກໍຈະຖືກເປີດກວ້າງສູ່ສາທາລະນະຊົນໄປເລື້ອຍໆ ແລະ ສິ່ງທີ່ເຮົາເປັນ ແລະ ມີຈະຖືກເພີ່ມເຂົ້າໃນບັນດາລູກຊາຍກົກຂອງເຮົາຫຼາຍຂຶ້ນ. ນີ້ແມ່ນວິທີການທີ່ເຮົາຈະປະຕິບັດພາລະກິດໃນອະນາຄົດ: ດ້ານໜຶ່ງ ແມ່ນຮັກສາ ແລະ ຊ່ວຍບັນດາຄົນທີ່ເຮົາຮັກໃຫ້ລອດພົ້ນ, ອີກດ້ານໜຶ່ງ ແມ່ນໃຊ້ພຣະທຳຂອງເຮົາເປີດເຜີຍບັນດາຜູ້ທີ່ເຮົາກຽດຊັງທັງໝົດ. ຈົ່ງຈື່ຈຳເອົາໄວ້! ນີ້ແມ່ນວິທີການແຫ່ງພາລະກິດຂອງເຮົາ, ບາດກ້າວພາລະກິດຂອງເຮົາ ທີ່ເປັນຈິງແທ້ແນ່ນອນ. ເຮົາໄດ້ວາງແຜນສິ່ງນີ້ນັບຕັ້ງແຕ່ການຊົງສ້າງ ແລະ ມັນບໍ່ສາມາດປ່ຽນແປງໄດ້.

ຍັງມີຫຼາຍພາກສ່ວນກ່ຽວກັບພຣະທຳຂອງເຮົາທີ່ຍາກສຳລັບຜູ້ຄົນທີ່ຈະເຂົ້າໃຈ, ດັ່ງນັ້ນ ເຮົາໄດ້ປັບປຸງຮູບແບບການປາກເວົ້າຂອງເຮົາ ແລະ ວິທີການທີ່ເຮົາເປີດເຜີຍຂໍ້ເລິກລັບ. ເວົ້າອີກຢ່າງໜຶ່ງກໍຄືຮູບແບບການປາກເວົ້າຂອງເຮົາກຳລັງປ່ຽນແປງ ແລະ ປັບປຸງຂຶ້ນທຸກມື້, ດ້ວຍຮູບແບບ ແລະ ວິທີການແຕ່ລະວັນ. ນີ້ແມ່ນບາດກ້າວພາລະກິດຂອງເຮົາ ແລະ ມັນບໍ່ສາມາດປ່ຽນແປງໄດ້. ຄົນສາມາດປາກເວົ້າ ແລະ ປະຕິບັດຕາມສິ່ງທີ່ເຮົາກ່າວເທົ່ານັ້ນ. ນີ້ແມ່ນຄວາມຈິງຢ່າງແທ້ແນ່ນອນ. ເຮົາໄດ້ເຮັດການຈັດແຈງທີ່ເໝາະສົມທັງໃນຕົວເຮົາ ແລະ ເນື້ອໜັງຂອງເຮົາ. ພາຍໃນທຸກກິດຈະການ ແລະ ການກະທຳແຫ່ງຄວາມເປັນມະນຸດຂອງເຮົາ ແມ່ນມີຮູບແບບແຫ່ງສະຕິປັນຍາຂອງຄວາມເປັນພຣະເຈົ້າຂອງເຮົາປະປົນຢູ່. (ໃນຖານະເປັນມະນຸດທີ່ບໍ່ມີສະຕິປັນຍາໃດເລີຍ ການເວົ້າວ່າ ລູກຊາຍກົກມີສະຕິປັນຍາຂອງເຮົານັ້ນ ໝາຍເຖິງ ແທ້ຈິງແລ້ວພວກເຂົາມີອຸປະນິໄສຄວາມເປັນພຣະເຈົ້າຂອງເຮົາຢູ່ໃນຕົວພວກເຂົາ). ເມື່ອລູກຊາຍກົກເຮັດໃນສິ່ງໂງ່ຈ້າ, ກໍຍ້ອນວ່າພວກເຈົ້າຍັງມີອົງປະກອບຂອງມະນຸດຢູ່ໃນຕົວພວກເຈົ້າຢູ່. ເພາະສະນັ້ນ ເຈົ້າຕ້ອງກຳຈັດຄວາມໂງ່ຈ້າຂອງມະນຸດດັ່ງກ່າວນັ້ນອອກ ແລະ ປະຕິບັດສິ່ງທີ່ເຮົາຮັກ ແລະ ປະຖິ້ມສິ່ງທີ່ເຮົາຊັງ. ໃຜກໍຕາມທີ່ມາຈາກເຮົາ ຕ້ອງກັບເຂົ້າມາຢູ່ພາຍໃນເຮົາ ແລະ ໃຜກໍຕາມທີ່ເກີດມາຈາກເຮົາຕ້ອງກັບເຂົ້າມາຢູ່ພາຍໃນສະຫງ່າລາສີຂອງເຮົາ. ບັນດາຜູ້ທີ່ເຮົາຊັງຕ້ອງຖືກປະຖິ້ມ ແລະ ຖືກຕັດອອກຈາກເຮົາເທື່ອລະຄົນ. ສິ່ງເຫຼົ່ານີ້ແມ່ນບາດກ້າວຂອງພາລະກິດຂອງເຮົາ; ມັນຄືການຄຸ້ມຄອງຂອງເຮົາ ແລະ ມັນຄືແຜນການຂອງການສ້າງຫົກພັນປີຂອງເຮົາ. ບັນດາຜູ້ທີ່ເຮົາປະຖິ້ມຄວນຍອມຮັບ ແລະ ຈົ່ງຈາກເຮົາໄປຢ່າງເຊື່ອຟັງ. ຍ້ອນພອນທີ່ເຮົາໄດ້ປະທານ

ໃຫ້ພວກເຂົາ, ບັນດາຜູ້ທີ່ເຮົາຮັກທັງໝົດຄວນສັນລະເສີນເຮົາ ເພື່ອວ່າພຣະນາມຂອງເຮົາຈະເຕີບໂຕຍິ່ງໃຫຍ່ຂຶ້ນໄປເລື້ອຍໆ ແລະ ເພື່ອວ່າແສງສະຫວ່າງອັນມີສະຫງ່າລາສີຈະໄດ້ຖືກຕື່ມເຕັມເຂົ້າສູ່ໃບໜ້າອັນສະຫງ່າລາສີຂອງເຮົາ ເພື່ອວ່າພວກເຂົາຈະເຕັມໄປດ້ວຍສະຕິປັນຍາຂອງເຮົາທີ່ຢູ່ໃນຄວາມສະຫງ່າລາສີຂອງເຮົາ ແລະ ຖວາຍກຽດແດ່ພຣະນາມຂອງເຮົາໃນແສງສະຫວ່າງອັນຍິ່ງໃຫຍ່ຂອງເຮົາຫຼາຍຍິ່ງຂຶ້ນ!

# ບົດທີ 105

ຍ້ອນຫຼັກການທີ່ຢູ່ເບື້ອງຫຼັງພຣະທຳຂອງເຮົາ ແລະ ຍ້ອນລັກສະນະທີ່ເຮົາປະຕິບັດພາລະກິດ ຜູ້ຄົນຈຶ່ງປະຕິເສດເຮົາ; ນີ້ແມ່ນຈຸດປະສົງທີ່ຢູ່ເບື້ອງຫຼັງການເວົ້າຂອງເຮົາເປັນເວລາຍາວນານ (ສິ່ງນີ້ແມ່ນແນໃສ່ເຊື້ອສາຍທຸກຄົນຂອງມັງກອນແດງຜູ້ຍິ່ງໃຫຍ່). ນີ້ແມ່ນວິທີການທີ່ມີສະຕິປັນຍາຂອງພາລະກິດຂອງເຮົາ; ມັນຄືການທີ່ເຮົາພິພາກສາມັງກອນແດງຜູ້ຍິ່ງໃຫຍ່. ນີ້ແມ່ນຍຸດທະສາດຂອງເຮົາ ແລະ ບໍ່ມີບຸກຄົນໃດສາມາດເຂົ້າໃຈມັນໄດ້ຢ່າງສົມບູນ. ໃນຈຸດປ່ຽນທຸກຈຸດ ນັ້ນກໍຄື ໃນທຸກໄລຍະທີ່ປ່ຽນແປງໃນແຜນການຄຸ້ມຄອງຂອງເຮົາ ບາງຄົນຕ້ອງຖືກກຳຈັດ; ພວກເຂົາຖືກກຳຈັດຕາມຜົນຕາມມາຂອງພາລະກິດຂອງເຮົາ. ສິ່ງນີ້ ແລະ ສິ່ງນີ້ເທົ່ານັ້ນແມ່ນວິທີການທີ່ແຜນການຄຸ້ມຄອງທັງໝົດຂອງເຮົາດຳເນີນການໄປ. ຫຼັງຈາກທີ່ເຮົາໄດ້ໂຍນຜູ້ຄົນທີ່ເຮົາຕ້ອງການກຳຈັດຖິ້ມເທື່ອລະຄົນ, ແລ້ວເຮົາກໍເລີ່ມຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ. ເຖິງຢ່າງໃດກໍຕາມ ນີ້ແມ່ນຄັ້ງສຸດທ້າຍທີ່ການໂຍນອອກນີ້ຈະເກີດຂຶ້ນ (ແລະ ນີ້ກໍໝາຍເຖິງຢູ່ພາຍໃນຄຣິສຕະຈັກໃນປະເທດຈີນ) ແລະ ມັນຍັງເປັນເວລາທີ່ຜູ້ຄົນຈຳນວນຫຼວງຫຼາຍທີ່ສຸດຈະຖືກກຳຈັດ ໃນລະຫວ່າງໄລຍະທີ່ປ່ຽນແປງ ນັບຕັ້ງແຕ່ການເນລະມິດສ້າງໂລກ. ຕະຫຼອດປະຫວັດສາດ ທຸກຄັ້ງທີ່ຜູ້ຄົນຖືກກຳຈັດ ມັນກໍຈະມີຄົນຈຳນວນໜຶ່ງທີ່ຫຼົງເຫຼືອໄວ້ເພື່ອໃຫ້ບໍລິການແກ່ເຮົາສຳລັບພາລະກິດຕໍ່ມາ. ເຖິງຢ່າງໃດກໍຕາມ ຄັ້ງນີ້ບໍ່ໄດ້ຄືກັນກັບຄັ້ງທີ່ຜ່ານມາ; ມັນສະອາດ ແລະ ມີປະສິດທິພາບ. ນີ້ແມ່ນສິ່ງທີ່ສຳຄັນທີ່ສຸດ ແລະ ຄວບຄຸມທີ່ສຸດຕະຫຼອດການ. ເຖິງແມ່ນຄົນສ່ວນໃຫຍ່ໄດ້ພະຍາຍາມບັງຄັບໃຫ້ເກີດມີຄວາມສົງໄສຈາກຄວາມຄິດຂອງພວກເຂົາຫຼັງຈາກທີ່ໄດ້ອ່ານພຣະທຳຂອງເຮົາ, ໃນທີ່ສຸດແລ້ວ ພວກເຂົາກໍບໍ່ສາມາດເອົາຊະນະມັນໄດ້ ແລະ ໃນທີ່ສຸດແລ້ວ ພວກເຂົາກໍຕົກລົງຢູ່ໃນຄວາມດົ້ນລົນຂອງພວກເຂົາ. ສິ່ງນີ້ບໍ່ໄດ້ຂຶ້ນກັບພວກເຂົາທີ່ຈະຕັດສິນໃຈ ຍ້ອນຄົນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າບໍ່ສາມາດຫຼີບໜີໄດ້ ແລະ ເຮົາພຽງແຕ່ສາມາດດູຖູກຄົນທີ່ເຮົາບໍ່ໄດ້ກຳນົດໄວ້ລ່ວງໜ້າ. ຄົນດຽວທີ່ເຮົາຮັກແມ່ນຄົນທີ່ເຮົາຫຼຽວເບິ່ງດ້ວຍຄວາມຊົມຊອບ; ບໍ່ດັ່ງນັ້ນກໍຈະບໍ່ມີແມ່ນແຕ່ຄົນດຽວທີ່ອາດຈາກໄປ ແລະ ເຂົ້າສູ່ອານາຈັກຂອງເຮົາຢ່າງອິດສະຫຼະ. ນີ້ແມ່ນທ່ອນເຫຼັກຂອງເຮົາ ແລະ ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນຄຳພະຍານທີ່ມີພະລັງ ແລະ ການສະແດງອອກຢ່າງສົມບູນເຖິງການປະຕິບັດບົດບັນຍັດການປົກຄອງຂອງເຮົາ. ແນ່ນອນ ສິ່ງນີ້ບໍ່ແມ່ນເລື່ອງການໄດ້ຮັບການປຸກໃຈເທົ່ານັ້ນ. ເປັນຫຍັງເຮົາຈຶ່ງເວົ້າວ່າ ຊາຕານໄຮ້ອຳນາດຕໍ່ການລົ້ມສະຫຼາຍ? ໃນຕອນທຳອິດ ມັນມີກຳລັງ ແຕ່ມັນຢູ່ໃນມືຂອງເຮົາ; ຖ້າເຮົາຂໍໃຫ້ມັນນອນລົງ ມັນກໍຕ້ອງນອນລົງ ແລະ ຖ້າເຮົາຂໍໃຫ້ມັນລຸກຂຶ້ນເພື່ອໃຫ້ບໍລິການແກ່ເຮົາ ມັນກໍຕ້ອງລຸກຂຶ້ນ ແລະ ໃຫ້ບໍລິການແກ່ເຮົາ ແລະ ເຮັດເປັນຢ່າງດີ. ມັນບໍ່ແມ່ນວ່າຊາຕານເຕັມໃຈເຮັດສິ່ງນີ້; ມັນແມ່ນທ່ອນເຫຼັກຂອງເຮົາທີ່ປົກຄອງຊາຕານ ແລະ ດ້ວຍວິທີນີ້ເທົ່ານັ້ນ ມັນຈຶ່ງເຊື່ອໝັ້ນດ້ວຍຫົວໃຈ ແລະ ດ້ວຍຄຳເວົ້າ. ບົດບັນຍັດການປົກຄອງຂອງເຮົາປົກຄອງມັນ ແລະ ເຮົາມີອຳນາດຂອງເຮົາ ສະນັ້ນ ຊາຕານຈຶ່ງບໍ່ສາມາດເຮັດຫຍັງໄດ້ນອກຈາກເຊື່ອໝັ້ນຢ່າງທີ່ສຸດ; ມັນຕ້ອງຖືກຢຽບຢ່ຳຢູ່ໃຕ້ບ່ອນຮອງຕີນຂອງເຮົາ ໂດຍບໍ່ມີການຕໍ່ຕ້ານ

ແມ່ນແຕ່ໜ້ອຍດຽວ. ໃນອະດີດ ເມື່ອມັນກຳລັງໃຫ້ບໍລິການແກ່ລູກຊາຍຂອງເຮົາ ຊາຕານກໍໜ້າດ້ານທີ່ສຸດ ແລະ ຕັ້ງໃຈຂົ່ມເຫັງພວກເຂົາ ແລ້ວກໍຫວັງທີ່ຈະເຮັດໃຫ້ເຮົາອັບອາຍ ແລະ ກ່າວອ້າງວ່າເຮົາບໍ່ສາມາດເຮັດຫຍັງໄດ້. ຊ່າງຕາບອດ! ເຮົາຈະຢຽບຢ່ຳເຈົ້າຈົນຕາຍ! ເລີ່ມເຮັດເລີຍ; ເຮົາທ້າໃຫ້ເຈົ້າໂຫດຮ້າຍອີກຄັ້ງໜຶ່ງ! ເຮົາທ້າໃຫ້ເຈົ້າປະຕິບັດຕໍ່ລູກຊາຍຂອງເຮົາດ້ວຍຄວາມເມີນເສີຍທີ່ເຢັນຊາອີກຄັ້ງ! ຍິ່ງຜູ້ຄົນຊື່ສັດຫຼາຍສ່ຳໃດ ແລະ ຍິ່ງພວກເຂົາຟັງພຣະທຳຂອງເຮົາ ແລະ ຍອມຕໍ່ເຮົາຫຼາຍສ່ຳໃດ, ເຈົ້າກໍຍິ່ງຂົ່ມເຫັງ ແລະ ແຍກດ່ຽວພວກເຂົາຫຼາຍສ່ຳນັ້ນ (ໃນທີ່ນີ້ ເຮົາກຳລັງໝາຍເຖິງການທີ່ເຈົ້າເຕົ້າໂຮມຜູ້ສົມຮູ້ຮ່ວມຄິດຂອງເຈົ້າເພື່ອກໍ່ຕົວເປັນພັກພວກ). ບັດນີ້ ມື້ແຫ່ງຄວາມໂຫດຮ້າຍຂອງເຈົ້າເຖິງຈຸດຈົບແລ້ວ ແລະ ເຮົາຈະຊຳລະລ້າງບັນຊີກັບເຈົ້າເທື່ອລະໜ້ອຍ; ເຮົາຈະບໍ່ປ່ອຍໃຫ້ເຈົ້າຈາກໄປດ້ວຍສິ່ງທີ່ເຈົ້າໄດ້ເຮັດແມ່ນແຕ່ເສດສ່ວນດຽວ. ຕອນນີ້ ມັນບໍ່ແມ່ນເຈົ້າ ນັ້ນກໍຄື ຊາຕານ ທີ່ໄດ້ມີອຳນາດ; ກົງກັນຂ້າມ ເຮົາຈະເອົາອຳນາດນັ້ນຄືນມາ ແລະ ເວລາທີ່ຈະເອີ້ນລູກຊາຍຂອງເຮົາໃຫ້ມາຈັດການກັບເຈົ້າກໍໄດ້ມາເຖິງແລ້ວ. ເຈົ້າຕ້ອງເຊື່ອຟັງ ແລະ ບໍ່ຕໍ່ຕ້ານແມ່ນແຕ່ໜ້ອຍດຽວ. ໃນອະດີດບໍ່ວ່າເຈົ້າຈະປະພຶດດີສ່ຳໃດກໍຕາມເມື່ອຢູ່ຕໍ່ໜ້າເຮົາ ສິ່ງນັ້ນກໍຈະບໍ່ຊ່ວຍຫຍັງເຈົ້າໃນມື້ນີ້. ຖ້າເຈົ້າບໍ່ແມ່ນໜຶ່ງໃນຄົນທີ່ເຮົາຮັກ ແລ້ວເຮົາກໍບໍ່ຕ້ອງການເຈົ້າ. ຫຼາຍເກີນໄປພຽງໜຶ່ງຄົນກໍບໍ່ສາມາດຮັບໄດ້; ມັນຕ້ອງເປັນຈຳນວນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ໜ້ອຍລົງກວ່ານັ້ນໜຶ່ງຄົນກໍຍິ່ງໂຫດຮ້າຍກວ່າເກົ່າ. ຊາຕານເອີຍ ຢ່າກໍ່ກວນ! ມັນເປັນໄປໄດ້ບໍວ່າ ເຮົາບໍ່ຊັດເຈນຢູ່ພາຍໃນຫົວໃຈຂອງເຮົາເອງກ່ຽວກັບວ່າເຮົາຮັກຜູ້ໃດ ແລະ ເຮົາກຽດຊັງຜູ້ໃດ? ເຮົາຈຳເປັນຕ້ອງໃຫ້ເຈົ້າເຕືອນເຮົາບໍ? ຊາຕານສາມາດໃຫ້ກຳເນີດແກ່ລູກຊາຍຂອງເຮົາບໍ? ທຸກຄົນໄຮ້ເຫດຜົນ! ທຸກຄົນເປັນຕາເວດທະນາ! ເຮົາຈະປະຖິ້ມທຸກຄົນຢ່າງທົ່ວເຖິງ ແລະ ຢ່າງສົມບູນ. ບໍ່ຕ້ອງການແມ່ນແຕ່ຄົນດຽວ; ທຸກຄົນຕ້ອງອອກໄປ! ແຜນການຄຸ້ມຄອງຫົກພັນປີໄດ້ມາເຖິງຈຸດຈົບ, ພາລະກິດຂອງເຮົາສິ້ນສຸດລົງ ແລະ ເຮົາຕ້ອງຊຳລະລ້າງຝູງສັດຮ້າຍ ແລະ ສັດປ່ານີ້!

ຄົນທີ່ເຊື່ອພຣະທຳຂອງເຮົາ ແລະ ປະຕິບັດຕາມພຣະທຳເຫຼົ່ານີ້ຕ້ອງເປັນຄົນທີ່ເຮົາຮັກ; ເຮົາຈະບໍ່ປະຖິ້ມພວກເຂົາແມ່ນແຕ່ຄົນດຽວ ແລະ ເຮົາຈະບໍ່ປ່ອຍໄປແມ່ນແຕ່ຄົນດຽວ. ສະນັ້ນ ຄົນທີ່ເປັນລູກຊາຍກໍບໍ່ຈຳເປັນຕ້ອງກັງວົນ. ຍ້ອນມັນຖືກມອບໃຫ້ໂດຍເຮົາ, ບໍ່ມີຜູ້ໃດສາມາດເອົາມັນໄປໄດ້ ແລະ ເຮົາໝັ້ນໃຈວ່າຈະປະທານມັນໃຫ້ແກ່ຄົນທີ່ເຮົາອວຍພອນ. ຄົນທີ່ເຮົາຮອງຮັບ (ກ່ອນໜ້າການເນລະມິດສ້າງໂລກ), ເຮົາກໍອວຍພອນ (ໃນມື້ນີ້). ນີ້ແມ່ນວິທີທີ່ເຮົາປະຕິບັດພາລະກິດ ແລະ ມັນຍັງເປັນຫຼັກການຫຼັກທີ່ຢູ່ເບື້ອງຫຼັງແຕ່ລະຂໍ້ຄວາມທີ່ຢູ່ໃນບົດບັນຍັດການປົກຄອງຂອງເຮົາ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້; ບໍ່ມີການເພີ່ມເຂົ້າແມ່ນແຕ່ພຣະທຳຂໍ້ດຽວ ຫຼື ປະໂຫຍກດຽວ ຫຼື ບໍ່ມີການເອົາອອກແມ່ນແຕ່ພຣະທຳ ຫຼື ປະໂຫຍກດຽວ. ໃນອະດີດ ເຮົາໄດ້ເວົ້າຢູ່ເລື້ອຍໆວ່າ ຕົວຕົນຂອງເຮົາປາກົດຕໍ່ພວກເຈົ້າ. ແລ້ວ “ຕົວຕົນ” ຂອງເຮົາແມ່ນຫຍັງ ແລະ ມັນປາກົດຂຶ້ນແນວໃດ? ສິ່ງນີ້ພຽງແຕ່ໝາຍເຖິງຕົວຕົນທີ່ເຮົາເປັນບໍ? ມັນພຽງແຕ່ໝາຍເຖິງທຸກປະໂຫຍກທີ່ເຮົາເວົ້າບໍ? ສອງລັກສະນະເຫຼົ່ານີ້ ໃນຂະນະທີ່ບໍ່ສາມາດຕັດຂາດອອກຈາກກັນ ກໍພຽງແຕ່ປະກອບເປັນສ່ວນເລັກນ້ອຍ; ນັ້ນກໍຄື

ພວກມັນບໍ່ໄດ້ປະກອບເປັນການອະທິບາຍຢ່າງສົມບູນເຖິງຕົວຕົນຂອງເຮົາ. ຕົວຕົນຂອງເຮົາປະກອບມີຕົວຕົນທີ່ເປັນເນື້ອໜັງຂອງເຮົາ, ພຣະທຳຂອງເຮົາ ແລະ ການກະທຳຂອງເຮົາອີກດ້ວຍ, ແຕ່ຄຳອະທິບາຍທີ່ຖືກຕ້ອງທີ່ສຸດກໍຄື ລູກຊາຍກົກຂອງເຮົາ ແລະ ເຮົາແມ່ນຕົວຕົນຂອງເຮົາ. ນັ້ນໝາຍຄວາມວ່າ ກຸ່ມຄະນະມະນຸດທີ່ເປັນຄຣິສຕຽນ ຜູ້ທີ່ປົກຄອງ ແລະ ມີອຳນາດແມ່ນຕົວຕົນຂອງເຮົາ. ດັ່ງນັ້ນ ລູກຊາຍກົກແຕ່ລະຄົນກໍບໍ່ສາມາດຕັດຂາດຈາກກັນ ແລະ ເປັນສ່ວນໜຶ່ງຂອງຕົວຕົນຂອງເຮົາ ແລະ ສະນັ້ນ ເຮົາຈຶ່ງເນັ້ນຢ້ຳວ່າ ຈຳນວນຂອງຄົນບໍ່ສາມາດຫຼາຍເກີນໄປແມ່ນແຕ່ໜຶ່ງຄົນ (ເພາະຈະນຳຄວາມອັບອາຍມາສູ່ນາມຂອງເຮົາ) ຫຼື ທີ່ສຳຄັນໄປກວ່ານັ້ນກໍຄືບໍ່ສາມາດມີໜ້ອຍລົງແມ່ນແຕ່ຄົນດຽວ (ເພາະຈະບໍ່ສາມາດສະແດງເຖິງເຮົາໄດ້ຢ່າງສົມບູນ). ຍິ່ງໄປກວ່ານັ້ນ ເຮົາໄດ້ເນັ້ນຢ້ຳຊ້ຳໄປຊ້ຳມາວ່າ ລູກຊາຍກົກແມ່ນຜູ້ທີ່ເປັນທີ່ຮັກທີ່ສຸດຂອງເຮົາ, ເປັນຊັບສົມບັດຂອງເຮົາ ແລະ ເປັນຜະລຶກແຫ່ງແຜນການຄຸ້ມຄອງຫົກພັນປີຂອງເຮົາ; ມີແຕ່ພວກເຂົາເທົ່ານັ້ນທີ່ສາມາດຮວມກັນເປັນການສະແດງອອກທີ່ສົມບູນ ແລະ ຄົບຖ້ວນຂອງເຮົາ. ເຮົາເອງກໍພຽງແຕ່ສາມາດເປັນການສະແດງອອກທີ່ຄົບຖ້ວນໃຫ້ແກ່ຕົວຕົນຂອງເຮົາ; ມີແຕ່ເມື່ອຮ່ວມກັນກັບລູກຊາຍກົກເທົ່ານັ້ນ ເຮົາເອງຈຶ່ງສາມາດເວົ້າໄດ້ວ່າເປັນການສະແດງອອກທີ່ສົມບູນ ແລະ ຄົບຖ້ວນໄດ້. ສະນັ້ນ ເຮົາຈຶ່ງຮຽກຮ້ອງຢ່າງເຄັ່ງຄັດກັບລູກຊາຍກົກຂອງເຮົາ ໂດຍບໍ່ເບິ່ງຂ້າມແມ່ນແຕ່ສິ່ງດຽວ ແລະ ເຮົາຕັດອອກ ແລະ ຂ້າທຸກຄົນທີ່ນອກເໜືອຈາກລູກຊາຍກົກຂອງເຮົາຊ້ຳໄປຊ້ຳມາ; ສິ່ງນີ້ແມ່ນຕົ້ນຕໍຂອງທຸກສິ່ງທີ່ເຮົາໄດ້ເວົ້າ ແລະ ເປັນເປົ້າໝາຍສຸດທ້າຍຂອງທຸກສິ່ງທີ່ເຮົາໄດ້ກ່າວ. ຍິ່ງໄປກວ່ານັ້ນ ຄັ້ງແລ້ວຄັ້ງເລົ່າ ເຮົາໄດ້ເນັ້ນຢ້ຳວ່າ ພວກເຂົາຕ້ອງເປັນຄົນທີ່ຖືກຮອງຮັບຈາກເຮົາ ເຊິ່ງເປັນຄົນທີ່ເຮົາໄດ້ເລືອກເປັນການສ່ວນຕົວ ນັບຕັ້ງແຕ່ການເນລະມິດສ້າງໂລກ. ແລ້ວຈະອະທິບາຍຄຳວ່າ "ປາກົດ" ວ່າແນວໃດ? ມັນກ່ຽວກັບເວລາທີ່ຄົນໃດໜຶ່ງເຂົ້າສູ່ໂລກຝ່າຍວິນຍານບໍ? ຄົນສ່ວນໃຫຍ່ເຊື່ອວ່າ ມັນແມ່ນເວລາທີ່ຕົວຕົນທີ່ເປັນເນື້ອໜັງຂອງເຮົາຖືກເຈີມ ຫຼື ເວລາທີ່ພວກເຂົາໄດ້ເຫັນຕົວຕົນທີ່ເປັນເນື້ອໜັງຂອງເຮົາ, ແຕ່ທຸກສິ່ງນີ້ແມ່ນປອມ; ມັນບໍ່ໄດ້ໃກ້ຄຽງແມ່ນແຕ່ໜ້ອຍດຽວ. ຄຳວ່າ "ປາກົດ" ຕາມຄວາມໝາຍເດີມຂອງມັນແລ້ວ ບໍ່ໄດ້ເຂົ້າໃຈຍາກເລີຍ, ແຕ່ການເຂົ້າໃຈມັນຕາມເຈດຕະນາຂອງເຮົາແຮງຍາກຫຼາຍກວ່າເກົ່າ. ມັນສາມາດເວົ້າໄດ້ແບບນີ້: ເມື່ອເຮົາສ້າງມະນຸດຊາດ, ເຮົາໃສ່ຄຸນລັກສະນະຂອງເຮົາເຂົ້າໃນຄົນກຸ່ມນີ້ທີ່ເຮົາຮັກ ແລະ ຄົນກຸ່ມນີ້ກໍເປັນຕົວຕົນຂອງເຮົາ. ເວົ້າອີກຢ່າງກໍຄື ຕົວຕົນຂອງເຮົາໄດ້ປາກົດຂຶ້ນໃນຕອນນັ້ນແລ້ວ. ມັນບໍ່ແມ່ນວ່າ ຕົວຕົນຂອງເຮົາປາກົດຂຶ້ນຫຼັງຈາກທີ່ນາມນີ້ໄດ້ຖືກຮັບເອົາ; ກົງກັນຂ້າມ ມັນຄື ການປາກົດຂຶ້ນຫຼັງຈາກທີ່ເຮົາໄດ້ກຳນົດຄົນກຸ່ມນີ້ໄວ້ລ່ວງໜ້າ, ຍ້ອນພວກເຂົາມີຄຸນລັກສະນະຂອງເຮົາ (ທຳມະຊາດຂອງພວກເຂົາບໍ່ປ່ຽນແປງ ແລະ ພວກເຂົາຍັງເປັນສ່ວນໜຶ່ງຂອງຕົວຕົນຂອງເຮົາ). ສະນັ້ນ ຕົວຕົນຂອງເຮົານັບຕັ້ງແຕ່ເວລາແຫ່ງການເນລະມິດສ້າງໂລກຈົນເຖິງປັດຈຸບັນຈຶ່ງໄດ້ປາກົດຂຶ້ນຢູ່ສະເໝີ. ຄົນສ່ວນໃຫຍ່ເຊື່ອແນວຄິດທີ່ວ່າ ຕົວຕົນທີ່ເປັນເນື້ອໜັງຂອງເຮົາແມ່ນຕົວຕົນຂອງເຮົາ ເຊິ່ງບໍ່ໄດ້ເປັນແບບນັ້ນເດັດຂາດ; ແນວຄວາມຄິດນັ້ນພຽງແຕ່ເກີດມາຈາກຄວາມຄິດ ແລະ ແນວຄິດຂອງພວກເຂົາ. ຖ້າຕົວຕົນທີ່ເປັນເນື້ອໜັງຂອງເຮົາເທົ່ານັ້ນແມ່ນຕົວຕົນຂອງເຮົາ, ແລ້ວສິ່ງນັ້ນກໍບໍ່ພຽງພໍທີ່ຈະເຮັດໃຫ້ຊາຕານອັບອາຍ.

ມັນບໍ່ສາມາດຖວາຍສະຫງ່າລາສີໃຫ້ແກ່ນາມຂອງເຮົາໄດ້ ແລະ ໃນຄວາມເປັນຈິງແລ້ວ ມັນມີຜົນຕອບໂຕ້ ແລ້ວນຳຄວາມອັບອາຍມາສູ່ນາມຂອງເຮົາ ແລະ ກາຍມາເປັນເຄື່ອງໝາຍທີ່ຊາຕານເຮັດໃຫ້ນາມຂອງເຮົາອັບອາຍທົ່ວຍຸກຕ່າງໆ. ເຮົາເປັນພຣະເຈົ້າທີ່ມີສະຕິປັນຍາ ແລະ ເຮົາຈະບໍ່ເຮັດສິ່ງທີ່ໂງ່ຈ້າແບບນັ້ນຈັກເທື່ອ.

ພາລະກິດຂອງເຮົາຕ້ອງມີຜົນໄດ້ຮັບ ແລະ ຍິ່ງໄປກວ່ານັ້ນ ເຮົາຕ້ອງກ່າວພຣະທຳໂດຍມີວິທີການ; ພຣະທຳ ແລະ ພຣະຄຳທັງໝົດຂອງເຮົາແມ່ນຖືກກ່າວຄຽງຄູ່ກັບພຣະວິນຍານຂອງເຮົາ ແລະ ເຮົາເວົ້າຕາມທຸກສິ່ງທີ່ພຣະວິນຍານຂອງເຮົາເຮັດ. ສະນັ້ນ ທຸກຄົນຄວນຮູ້ສຶກເຖິງພຣະວິນຍານຂອງເຮົາຜ່ານພຣະທຳຂອງເຮົາ, ເຫັນເຖິງສິ່ງທີ່ພຣະວິນຍານຂອງເຮົາກຳລັງເຮັດ; ພວກເຂົາຄວນເຫັນວ່າເຮົາຕ້ອງການເຮັດຫຍັງກັນແທ້, ພວກເຂົາຄວນເຫັນວິທີການທີ່ເຮົາປະຕິບັດພາລະກິດໂດຍອີງຕາມພຣະທຳຂອງເຮົາ ແລະ ເຫັນວ່າຫຼັກການແຫ່ງແຜນການຄຸ້ມຄອງທັງໝົດຂອງເຮົາແມ່ນຫຍັງ. ເຮົາເຝົ້າເບິ່ງພາບລວມຂອງຈັກກະວານ: ທຸກຄົນ, ທຸກເຫດການ ແລະ ທຸກຫົນແຫ່ງລ້ອນແລ້ວແຕ່ລົ້ມລົງຢູ່ພາຍໃຕ້ຄຳສັ່ງຂອງເຮົາ. ບໍ່ມີຜູ້ໃດກ້າລະເມີດແຜນການຂອງເຮົາ; ທຸກສິ່ງດຳເນີນໄປເທື່ອລະບາດກ້າວໃນລຳດັບທີ່ເຮົາໄດ້ກຳນົດໄວ້. ນີ້ແມ່ນອຳນາດຂອງເຮົາ; ນີ້ແມ່ນບ່ອນທີ່ມີສະຕິປັນຍາຂອງແຫ່ງການຄຸ້ມຄອງແຜນການທັງໝົດຂອງເຮົາ. ບໍ່ມີຜູ້ໃດສາມາດເຂົ້າໃຈໄດ້ຢ່າງສົມບູນ ຫຼື ເວົ້າໄດ້ຢ່າງຊັດເຈນ; ທຸກສິ່ງຖືກປະຕິບັດໂດຍເຮົາເປັນການສ່ວນຕົວ ແລະ ຖືກຄວບຄຸມໂດຍເຮົາແຕ່ພຽງຜູ້ດຽວ.

# ບົດທີ 106

ຄົນທີ່ບໍ່ຮູ້ຈັກພຣະທຳຂອງເຮົາ, ຄົນທີ່ບໍ່ຮູ້ຈັກຄວາມເປັນມະນຸດທີ່ປົກກະຕິຂອງເຮົາ ແລະ ຄົນທີ່ທ້າທາຍຄວາມເປັນພຣະເຈົ້າຂອງເຮົາທຸກຄົນຈະຖືກທຳລາຍໃຫ້ກາຍເປັນຄວາມວ່າງເປົ່າ. ບໍ່ມີຜູ້ໃດຈະໄດ້ຮັບການລະເວັ້ນຈາກສິ່ງນີ້ ແລະ ທຸກຄົນຕ້ອງຜ່ານມາດຕະຖານທີ່ເໝາະສົມໃນລັກສະນະນີ້ ຍ້ອນມັນຄືບົດບັນຍັດການປົກຄອງຂອງເຮົາ ແລະ ນີ້ແມ່ນບົດບັນຍັດທີ່ຮຸນແຮງທີ່ສຸດທີ່ຕ້ອງໄດ້ປະຕິບັດ. ຄົນທີ່ບໍ່ຮູ້ຈັກພຣະທຳຂອງເຮົາກໍເປັນຄົນທີ່ຟັງສິ່ງຕ່າງໆທີ່ເຮົາຊີ້ແຈງຢ່າງຊັດເຈນ ແຕ່ຍັງບໍ່ມີຄວາມຮູ້ກ່ຽວກັບສິ່ງເຫຼົ່ານັ້ນ; ເວົ້າອີກຢ່າງໜຶ່ງກໍຄື ພວກເຂົາເປັນຄົນທີ່ບໍ່ເຂົ້າໃຈເລື່ອງຝ່າຍວິນຍານ (ຍ້ອນເຮົາບໍ່ໄດ້ສ້າງຄວາມສາມາດຂອງມະນຸດທີ່ຕອບໂຕ້ກັບເລື່ອງຝ່າຍວິນຍານ, ເຮົາບໍ່ຮຽກຮ້ອງຈາກພວກເຂົາຫຼາຍ; ເຮົາພຽງແຕ່ຮຽກຮ້ອງໃຫ້ພວກເຂົາຟັງພຣະທຳຂອງເຮົາ ແລະ ສາມາດນຳພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດ). ຄົນເຫຼົ່ານັ້ນບໍ່ແມ່ນປະຊາຊົນໃນເຮືອນຂອງເຮົາ ຫຼື ພວກເຂົາບໍ່ແມ່ນປະເພດດຽວກັນກັບເຮົາ; ພວກເຂົາເປັນຂອງປະເທດຂອງຊາຕານ. ສະນັ້ນ ເຮົາຈຶ່ງບໍ່ຕ້ອງການຜູ້ຄົນເຫຼົ່ານີ້ທີ່ບໍ່ເຂົ້າໃຈເລື່ອງຝ່າຍວິນຍານຂອງເຮົາແມ່ນແຕ່ຄົນດຽວ. ແຕ່ກ່ອນ ພວກເຈົ້າຄິດວ່າເຮົາໄປໄກເກີນໄປ, ແຕ່ໃນຕອນນີ້ ພວກເຈົ້າຄວນເຂົ້າໃຈ. ສັດຮ້າຍຈະສາມາດສົນທະນາກັບພຣະເຈົ້າໄດ້ແນວໃດ? ນັ້ນຈະບໍ່ແມ່ນສິ່ງທີ່ບໍ່ສົມເຫດສົມຜົນບໍ? ຜູ້ຄົນທີ່ບໍ່ຮູ້ຈັກຄວາມເປັນມະນຸດທີ່ປົກກະຕິຂອງເຮົາແມ່ນຄົນທີ່ໃຊ້ແນວຄິດຂອງພວກເຂົາເອງເພື່ອວັດແທກສິ່ງທີ່ເຮົາກະທຳໃນຄວາມເປັນມະນຸດຂອງເຮົາ. ແທນທີ່ຈະຍອມຈຳນົນ, ພວກເຂົາພັດມາຈັບຜິດເຮົາດ້ວຍສາຍຕາໃນເນື້ອໜັງຂອງພວກເຂົາ. ບາງທີ ພຣະທຳທີ່ເຮົາກ່າວນັ້ນສູນເປົ່າບໍ? ເຮົາໄດ້ເວົ້າວ່າ ຄວາມເປັນມະນຸດທີ່ປົກກະຕິຂອງເຮົາແມ່ນສ່ວນທີ່ບໍ່ສາມາດຂາດໄດ້ໃນຕົວເຮົາ ຜູ້ເປັນພຣະເຈົ້າທີ່ສົມບູນ ແລະ ນີ້ແມ່ນວິທີທີ່ຖືກຕ້ອງເຊິ່ງຄວາມເປັນມະນຸດທີ່ປົກກະຕິ ແລະ ຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາເຮັດວຽກຮ່ວມກັນ. ເມື່ອສິ່ງຕ່າງໆທີ່ເຮົາເຮັດຜ່ານຄວາມເປັນມະນຸດທີ່ປົກກະຕິຂອງເຮົາບໍ່ສອດຄ່ອງກັບແນວຄິດຂອງມະນຸດ, ຄົນທີ່ທ້າທາຍເຮົາ ແລະ ຄົນທີ່ບໍ່ເຂົ້າກັນໄດ້ກັບເຮົາກໍຖືກເປີດເຜີຍອອກ. ຫຼັງຈາກນັ້ນ ຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາຈຶ່ງກ່າວຜ່ານຄວາມເປັນມະນຸດ ແລະ ເຮົາໄດ້ຈັດການກັບບາງຄົນດ້ວຍວິທີນີ້. ຖ້າເຈົ້າບໍ່ເຂົ້າໃຈໃນສິ່ງທີ່ເຮົາກະທຳ ແຕ່ກໍຍອມບໍ່ວ່າຫຍັງກໍຕາມ, ແລ້ວເຈົ້າກໍເປັນຄົນປະເພດທີ່ເຮົາຈະບໍ່ກ່າວໂທດ; ເຮົາພຽງແຕ່ສ່ອງແສງສະຫວ່າງແກ່ຄົນດັ່ງກ່າວ. ເຮົາຮັກຄົນດັ່ງກ່າວ ແລະ ຍ້ອນຄວາມອ່ອນນ້ອມຂອງເຈົ້າເຮົາຈຶ່ງສ່ອງແສງສະຫວ່າງແກ່ເຈົ້າ. ຄົນທີ່ທ້າທາຍຄວາມເປັນພຣະເຈົ້າຂອງເຮົາລວມເຖິງຄົນທີ່ບໍ່ຮູ້ຈັກພຣະທຳຂອງເຮົາ, ຄົນທີ່ບໍ່ສາມາດເຂົ້າກັນໄດ້ກັບຄວາມເປັນມະນຸດທີ່ປົກກະຕິຂອງເຮົາ ແລະ ຄົນທີ່ບໍ່ເຫັນດີກັບສິ່ງທີ່ເຮົາກະທຳໃນຄວາມເປັນພຣະເຈົ້າ (ຕົວຢ່າງເຊັ່ນ: ການທີ່ເຮົາໃຈຮ້າຍ ຫຼື ສ້າງຕັ້ງຄຣິສຕະຈັກ ແລະ ອື່ນໆອີກ). ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນການສະແດງອອກເຖິງການຕໍ່ຕ້ານຄວາມເປັນພຣະເຈົ້າຂອງເຮົາ. ເຖິງຢ່າງໃດກໍຕາມ ມີສິ່ງໜຶ່ງທີ່ເຮົາຕ້ອງເນັ້ນຢ້ຳ ແລະ ພວກເຈົ້າແຕ່ລະຄົນຄວນເອົາໃຈໃສ່: ຄົນທີ່ບໍ່ສາມາດເຂົ້າກັນໄດ້ກັບຕົວຕົນທີ່ເຮົາເປັນໃນມື້ນີ້ແມ່ນກຳລັງຕໍ່ຕ້ານຄວາມເປັນ

ພຣະເຈົ້າຂອງເຮົາ. ເປັນຫຍັງເຮົາຈຶ່ງສືບຕໍ່ເວົ້າວ່າ ຕົວຕົນທີ່ເຮົາເປັນແມ່ນພຣະເຈົ້າທີ່ສົມບູນເອງ? ອຸປະນິໄສຂອງຕົວຕົນທີ່ເຮົາເປັນປະກອບມີອຸປະນິໄສທີ່ສັກສິດທັງໝົດ; ຢ່າໃຊ້ແນວຄິດຂອງມະນຸດເພື່ອວັດແທກເຮົາ. ແມ່ນແຕ່ໃນຕອນນີ້ ຫຼາຍຄົນຍັງເວົ້າວ່າ ເຮົາມີຄວາມເປັນມະນຸດທີ່ປົກກະຕິ ແລະ ທຸກສິ່ງທີ່ເຮົາເຮັດກໍບໍ່ໄດ້ຈຳເປັນຕ້ອງຖືກ. ເມື່ອຜູ້ຄົນເປັນແບບນີ້, ເຈົ້າບໍ່ໄດ້ກຳລັງຂໍຮ້ອງທີ່ຈະຕາຍເທົ່ານັ້ນບໍ? ພວກເຂົາບໍ່ຮູ້ຈັກແມ່ນແຕ່ໜ້ອຍດຽວວ່າເຮົາກຳລັງກ່າວພຣະທຳຫຍັງ ແລະ ພວກເຂົາເປັນເຊື້ອສາຍຂອງຄົນຕາບອດແທ້ໆ ແລະ ເປັນລູກຫຼານຂອງມັງກອນແດງຜູ້ຍິ່ງໃຫຍ່! ເຮົາຈະບອກທຸກຄົນອີກຄັ້ງ (ແລະ ເຮົາຈະບໍ່ເວົ້າສິ່ງນີ້ອີກຄັ້ງໃນພາຍຫຼັງ ແລະ ທຸກຄົນທີ່ເຮັດຜິດແບບນີ້ອີກຄັ້ງກໍຈະຖືກສາບແຊ່ງຢ່າງແນ່ນອນ): ພຣະທຳຂອງເຮົາ, ສຽງຫົວຂອງເຮົາ, ການກິນຂອງເຮົາ, ການໃຊ້ຊີວິດຂອງເຮົາ, ຄຳເວົ້າຂອງເຮົາ ແລະ ພຶດຕິກຳຂອງເຮົາແມ່ນລ້ວນແລ້ວແຕ່ຖືກກະທຳໂດຍເຮົາ ນັ້ນກໍຄືພຣະເຈົ້າເອງ ແລະ ບໍ່ມີຮ່ອງຮອຍຂອງມະນຸດປະປົນຢູ່ໃນທີ່ນີ້ແມ່ນແຕ່ໜ້ອຍດຽວ. ບໍ່ມີ! ບໍ່ມີເລີຍ! ທຸກຄົນຕ້ອງເຊົາຫຼິ້ນເກມທາງຈິດ ແລະ ຢຸດການຄຳນວນທີ່ບໍ່ສຳຄັນຂອງພວກເຂົາ. ຍິ່ງຜູ້ຄົນສືບຕໍ່ເຮັດສິ່ງເຫຼົ່ານີ້ຫຼາຍສໍ່າໃດ, ພວກເຂົາກໍຍິ່ງຈະຈິບຫາຍຫຼາຍສໍ່ານັ້ນ. ໃຫ້ເອົາໃຈໃສ່ຄຳແນະນຳຂອງເຮົາ!

ເຮົາຄົ້ນເບິ່ງໃນສ່ວນເລິກທີ່ສຸດໃນຫົວໃຈຂອງທຸກຄົນຢູ່ສະເໝີ, ຄົ້ນເບິ່ງທຸກໆຄຳເວົ້າ ແລະ ການກະທຳຂອງແຕ່ລະຄົນ. ເຮົາເຫັນຄົນທີ່ເຮົາມັກ ແລະ ຄົນທີ່ເຮົາບໍ່ມັກເທື່ອລະຄົນຢ່າງຊັດເຈນ. ນີ້ແມ່ນບາງສິ່ງທີ່ຜູ້ຄົນບໍ່ສາມາດຈິນຕະນາການໄດ້ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນສິ່ງທີ່ພວກເຂົາບໍ່ສາມາດເຮັດໃຫ້ສຳເລັດໄດ້. ເຮົາໄດ້ເວົ້າຫຼາຍຢ່າງ ແລະ ເຮົາໄດ້ເຮັດຫຼາຍສິ່ງ; ຜູ້ໃດຈະສາມາດຄົ້ນຫາວ່າຈຸດປະສົງຂອງພຣະທຳຂອງເຮົາແມ່ນຫຍັງ ແລະ ຈຸດປະສົງຂອງສິ່ງທີ່ເຮົາເຮັດແມ່ນຫຍັງ? ບໍ່ມີຜູ້ໃດສາມາດເຮັດໄດ້. ຕັ້ງແຕ່ນີ້ໄປ ເຮົາຈະຍິ່ງກ່າວພຣະທຳຫຼາຍຂຶ້ນ; ໃນດ້ານໜຶ່ງ ສິ່ງນີ້ຈະກຳຈັດທຸກຄົນທີ່ເຮົາບໍ່ມັກ ໃນຂະນະທີ່ໃນອີກດ້ານໜຶ່ງ ມັນຈະເຮັດໃຫ້ພວກເຈົ້າທົນທຸກອີກໜ້ອຍໜຶ່ງໃນເລື່ອງນີ້ ເພື່ອວ່າເຈົ້າຈະໄດ້ຊີມລົດຊາດຂອງການຟື້ນຄືນຊີບອີກຄັ້ງ, ພຽງແຕ່ດ້ວຍຄວາມຮຸນແຮງຫຼາຍຂຶ້ນ. ສິ່ງນີ້ບໍ່ສາມາດຖືກກຳນົດໂດຍຜູ້ຄົນ ຫຼື ບໍ່ມີຜູ້ໃດສາມາດຫ້າມບໍ່ໃຫ້ມັນເກີດຂຶ້ນໄດ້. ເຖິງແມ່ນວ່າເຈົ້າຮູ້ເຖິງສິ່ງນີ້ໃນຕອນນີ້, ເມື່ອເວລາມາເຖິງ ເຈົ້າຈະຍັງບໍ່ສາມາດຫຼີກເວັ້ນການທົນທຸກແບບນີ້ ຍ້ອນນີ້ແມ່ນວິທີການແຫ່ງພາລະກິດຂອງເຮົາ. ເຮົາຕ້ອງປະຕິບັດພາລະກິດແບບນີ້ເພື່ອບັນລຸເປົ້າໝາຍຂອງເຮົາ ແລະ ເພື່ອວ່າຄວາມປະສົງຂອງເຮົາຈະສາມາດຖືກປະຕິບັດໃນພວກເຈົ້າໄດ້. ນີ້ຄືເຫດຜົນທີ່ມັນຖືກເອີ້ນວ່າ "ການທົນທຸກຄັ້ງສຸດທ້າຍທີ່ພວກເຈົ້າຈຳເປັນຕ້ອງໄດ້ຮັບ". ຫຼັງຈາກນັ້ນ ເນື້ອໜັງຂອງພວກເຈົ້າຈະບໍ່ທົນທຸກອີກຕໍ່ໄປ ຍ້ອນມັງກອນແດງຜູ້ຍິ່ງໃຫຍ່ຈະຖືກເຮົາທຳລາຍລ້າງ ແລະ ຈະບໍ່ກ້າກໍ່ການຈາລາຈົນອີກຕໍ່ໄປ. ນີ້ແມ່ນບາດກ້າວສຸດທ້າຍກ່ອນເຂົ້າສູ່ຮ່າງກາຍ; ມັນແມ່ນຂັ້ນຕອນການປ່ຽນແປງ. ແຕ່ຢ່າຢ້ານ, ເຮົາຈະນຳພາພວກເຈົ້າໃຫ້ຜ່ານຄວາມຫຍຸ້ງຍາກຊໍ້າແລ້ວຊໍ້າອີກຢ່າງແນ່ນອນ. ໃຫ້ເຊື່ອວ່າເຮົາເປັນພຣະເຈົ້າທີ່ຊອບທຳ ແລະ ສິ່ງທີ່ເຮົາເວົ້າກໍຈະເກີດຂຶ້ນຢ່າງແນ່ນອນ. ເຮົາເປັນພຣະເຈົ້າທີ່ເພິ່ງພາໄດ້. ທຸກປະເທດ, ທຸກດິນແດນ ແລະ ທຸກນິກາຍກຳລັງກັບຄືນມາຫາເຮົາ ແລະ ຫຼັ່ງໄຫຼມາສູ່ບັນລັງຂອງເຮົາ. ນີ້ແມ່ນອຳນາດທີ່ຍິ່ງໃຫຍ່ຂອງເຮົາ ແລະ ເຮົາຈະພິພາກສາລູກແຫ່ງຄວາມກະບົດທຸກຄົນ ແລະ ໂຍນພວກເຂົາລົງສູ່

ທະເລສາບແຫ່ງໄຟ ແລະ ມາດ ໂດຍບໍ່ມີການຍົກເວັ້ນ. ທຸກຄົນຕ້ອງລ້າຖອຍ. ນີ້ແມ່ນບາດກ້າວສຸດທ້າຍຂອງແຜນການຄຸ້ມຄອງຂອງເຮົາ ແລະ ຫຼັງຈາກທີ່ມັນສຳເລັດລົງ ເຮົາກໍຈະເຂົ້າສູ່ການພັກຜ່ອນ ຍ້ອນທຸກສິ່ງຈະຖືກເຮັດໃຫ້ສຳເລັດ ແລະ ແຜນການຄຸ້ມຄອງຂອງເຮົາຈະມາເຖິງຈຸດຈົບ.

ຍ້ອນໄລຍະກ້າວຂອງພາລະກິດຂອງເຮົາໄດ້ເພີ່ມຂຶ້ນ (ເຖິງແມ່ນວ່າເຮົາບໍ່ໄດ້ຮູ້ສຶກກະວົນກະວາຍເລີຍ), ເຮົາກໍເປີດເຜີຍພຣະທຳຂອງເຮົາໃຫ້ແກ່ພວກເຈົ້າໃນແຕ່ລະມື້ ແລະ ເຮົາເປີດເຜີຍຄວາມລຶກລັບທີ່ເຮົາມີໃຫ້ແກ່ພວກເຈົ້າໃນແຕ່ລະມື້ ເພື່ອວ່າພວກເຈົ້າຈະສາມາດຕິດຕາມບາດກ້າວຂອງເຮົາຢ່າງໃກ້ຊິດໄດ້. (ນີ້ແມ່ນສະຕິປັນຍາຂອງເຮົາ; ເຮົາໃຊ້ພຣະທຳຂອງເຮົາເພື່ອເຮັດໃຫ້ຜູ້ຄົນສົມບູນ, ແຕ່ຍັງເພື່ອໂຈມຕີຜູ້ຄົນໃຫ້ລົ້ມລົງ. ທຸກຄົນອ່ານພຣະທຳຂອງເຮົາ ແລະ ສາມາດປະຕິບັດຕາມຄວາມປະສົງຂອງເຮົາທີ່ຢູ່ໃນພຣະທຳຂອງເຮົາ. ຄົນທີ່ຄິດລົບກໍຈະຄິດລົບ ແລະ ຄົນທີ່ຈະຖືກເປີດເຜີຍກໍຈະສະແດງທາດແທ້ຂອງພວກເຂົາອອກມາ; ຄົນທີ່ທ້າທາຍກໍຈະຕໍ່ຕ້ານ ແລະ ຄົນທີ່ຮັກເຮົາຢ່າງຈິງໃຈຮັກພັກດີກໍຍິ່ງຈະຈົງຮັກພັກດີຫຼາຍຂຶ້ນ. ສະນັ້ນ ທຸກຄົນຈະສາມາດຕິດຕາມບາດກ້າວຂອງເຮົາ. ທຸກສະຖານະການເຫຼົ່ານີ້ທີ່ເຮົາໄດ້ອະທິບາຍແມ່ນວິທີການທີ່ເຮົາປະຕິບັດພາລະກິດ ແລະ ເປົ້າໝາຍທີ່ເຮົາປາຖະໜາຈະບັນລຸ). ໃນອະດີດ ເຮົາໄດ້ເວົ້າເຖິງສິ່ງແບບນີ້: ເຮົານຳພາພວກເຈົ້າແນວໃດ ພວກເຈົ້າກໍຄວນສະແຫວງຫາໃນລັກສະນະດຽວກັນ; ບໍ່ວ່າເຮົາຈະເວົ້າຫຍັງກໍຕາມກັບພວກເຈົ້າ, ພວກເຈົ້າກໍຄວນຟັງ. ເຈົ້າໝາຍຄວາມວ່າແນວໃດກັບສິ່ງນີ້? ພວກເຈົ້າຮູ້ຈັກບໍ? ແມ່ນຫຍັງຄືຈຸດປະສົງ ແລະ ຄວາມໝາຍຂອງພຣະທຳຂອງເຮົາ? ພວກເຈົ້າເຂົ້າໃຈບໍ? ມີເທົ່າໃດຄົນທີ່ສາມາດເວົ້າສິ່ງນີ້ອອກຢ່າງສົມບູນໄດ້? ເມື່ອເຮົາເວົ້າວ່າ "ເຮົານຳພາພວກເຈົ້າແນວໃດ ພວກເຈົ້າກໍຄວນສະແຫວງຫາໃນລັກສະນະດຽວກັນ", ເຮົາບໍ່ພຽງແຕ່ໝາຍເຖິງການນຳທາງທີ່ເຮົາສະໜອງໃຫ້ໃນດ້ວຍຕົວຕົນທີ່ເຮົາເປັນ; ຍິ່ງໄປກວ່ານັ້ນ ເຮົາກຳລັງໝາຍເຖິງພຣະທຳທີ່ເຮົາກ່າວ ແລະ ເສັ້ນທາງທີ່ເຮົາຍ່າງ. ມື້ນີ້ ພຣະທຳເຫຼົ່ານີ້ໄດ້ຖືກບັນລຸຢ່າງແທ້ຈິງ. ທັນທີທີ່ເຮົາໄດ້ກ່າວພຣະທຳຂອງເຮົາ ໃບໜ້າຂອງມານຮ້າຍທຸກຮູບແບບກໍຖືກເປີດໂປງຕໍ່ໜ້າແສງສະຫວ່າງແຫ່ງການສະຖິດຢູ່ຂອງເຮົາ ໂດຍມອບມຸມມອງທີ່ຊັດເຈນກ່ຽວກັບພວກມັນທັງໝົດໃຫ້ແກ່ພວກເຈົ້າ. ພຣະຄຳເຫຼົ່ານີ້ຂອງເຮົາບໍ່ພຽງແຕ່ເປັນການປະກາດຕໍ່ຊາຕານ, ແຕ່ຍັງເປັນການຝາກຝັງໃຫ້ແກ່ພວກເຈົ້າທຸກຄົນ. ພວກເຈົ້າສ່ວນໃຫຍ່ເມີນເສີຍຕໍ່ພຣະທຳເຫຼົ່ານີ້ ໂດຍເຊື່ອວ່າພວກມັນເປັນການຝາກຝັງໃຫ້ແກ່ພວກເຈົ້າ; ພວກເຈົ້າບໍ່ຮັບຮູ້ວ່າ ພວກມັນເປັນພຣະທຳແຫ່ງການພິພາກສາ ແລະ ພຣະທຳທີ່ມີສິດອຳນາດ. ຈຸດປະສົງຂອງພຣະທຳຂອງເຮົາແມ່ນເພື່ອສັ່ງການຊາຕານໃຫ້ເຮັດບໍລິການແກ່ເຮົາຢ່າງຖືກຕ້ອງ ແລະ ຍອມຕໍ່ເຮົາຢ່າງສົມບູນ. ຈາກບັນດາຄວາມລຶກລັບທີ່ເຮົາໄດ້ເປີດເຜີຍໃນອະດີດ ແມ່ນຍັງມີຫຼາຍຢ່າງທີ່ພວກເຈົ້າບໍ່ທັນເຂົ້າໃຈເທື່ອ. ເມື່ອເປັນດັ່ງນັ້ນ ໃນອະນາຄົດ ເຮົາຈະເປີດເຜີຍໃຫ້ແກ່ພວກເຈົ້າຫຼາຍຂຶ້ນ ເພື່ອວ່າພວກເຈົ້າຈະສາມາດບັນລຸຄວາມເຂົ້າໃຈທີ່ຊັດເຈນຫຼາຍຂຶ້ນ ແລະ ທົ່ວເຖິງຫຼາຍຂຶ້ນ.

ເມື່ອໄພພິບັດທີ່ຍິ່ງໃຫຍ່ມາເຖິງ, ທຸກຄົນກໍຢ້ານກົວ. ທຸກຄົນຮ້ອງໄຫ້ດ້ວຍຄວາມໂສກເສົ້າ ແລະ ຮູ້ສຶກກຽດຊັງສິ່ງຊົ່ວຮ້າຍທີ່ພວກເຂົາໄດ້ເຮັດໃນອະດີດ ແຕ່ໃນຕອນນັ້ນ ມັນກໍຊ້າເກີນໄປແລ້ວ ຍ້ອນນີ້

ແມ່ນຍຸກແຫ່ງຄວາມໂກດຮ້າຍ. ມັນບໍ່ແມ່ນເວລາທີ່ຈະຊ່ວຍຜູ້ຄົນໃຫ້ລອດພົ້ນ ແລະ ມອບຄວາມກະລຸນາ, ແຕ່ເປັນເວລາທີ່ຈະຊຳລະລ້າງຜູ້ໃຫ້ບໍລິການທັງໝົດ ແລະ ອະນຸຍາດໃຫ້ລູກຊາຍຂອງເຮົາປົກຄອງແທນເຮົາ. ແນ່ນອນ ສິ່ງນີ້ແມ່ນແຕກຕ່າງຈາກເວລາທີ່ຢູ່ໃນອະດີດ; ມັນບໍ່ເຄີຍມີມາກ່ອນນັບຕັ້ງແຕ່ການເນລະມິດສ້າງໂລກ. ຍ້ອນເຮົາເຄີຍສ້າງໂລກຄັ້ງໜຶ່ງ ເຮົາຈະທຳລາຍມັນອີກຄັ້ງ ແລະ ສິ່ງທີ່ເຮົາໄດ້ກຳນົດລ່ວງໜ້າກໍບໍ່ສາມາດປ່ຽນແປງໄດ້ໂດຍຜູ້ໃດກໍຕາມ. ໃນເມື່ອກ່ອນ ຄຳສັບສອງຄຳ "ມະນຸດທີ່ເປັນຄຣິສຕຽນແບບຄະນະ" ແລະ "ມະນຸດສາກົນທີ່ເປັນຄົນໃໝ່ແບບຄະນະ" ແມ່ນຖືກກ່າວເຖິງຂ້ອນຂ້າງເລື້ອຍໆ. ຄວນອະທິບາຍພວກມັນວ່າແນວໃດ? ຄຳວ່າ "ມະນຸດທີ່ເປັນຄຣິສຕຽນແບບຄະນະ" ໝາຍເຖິງລູກຊາຍກົກບໍ? ຄຳວ່າ "ມະນຸດສາກົນທີ່ເປັນຄົນໃໝ່ແບບຄະນະ" ໝາຍເຖິງລູກຊາຍກົກເຊັ່ນກັນບໍ? ບໍ່; ຜູ້ຄົນບໍ່ໄດ້ຕີຄວາມໝາຍຂອງວະລີເຫຼົ່ານັ້ນຢ່າງຖືກຕ້ອງ. ຍ້ອນແນວຄິດຂອງມະນຸດພຽງແຕ່ສາມາດຊ່ວຍໃຫ້ພວກເຂົາເຂົ້າໃຈສິ່ງຕ່າງໆຈົນຮອດລະດັບນີ້, ເຮົາຈຶ່ງຈະຊີ້ແຈງພວກມັນໃຫ້ກັບພວກເຈົ້າ ໃນທີ່ນີ້ ແລະ ໃນຕອນນີ້. ມະນຸດທີ່ເປັນຄຣິສຕຽນແບບຄະນະ ແລະ ມະນຸດສາກົນທີ່ເປັນຄົນໃໝ່ແບບຄະນະບໍ່ຄືກັນ; ຄວາມໝາຍຂອງພວກມັນແມ່ນແຍກອອກຈາກກັນ. ເຖິງແມ່ນສອງຄຳສັບເຫຼົ່ານີ້ມີຄວາມຄ້າຍຄືກັນຫຼາຍ ແລະ ພວກມັນອາດເບິ່ງຄືກັບວ່າເປັນສິ່ງດຽວກັນ, ສະຖານະການທີ່ແທ້ຈິງແມ່ນກົງກັນຂ້າມຢ່າງສິ້ນເຊີງ. "ມະນຸດທີ່ເປັນຄຣິສຕຽນແບບຄະນະ" ໝາຍເຖິງຜູ້ໃດກັນແທ້? ຫຼື ມັນໝາຍເຖິງຫຍັງ? ເມື່ອເວົ້າເຖິງມະນຸດທີ່ເປັນຄຣິສຕຽນ, ທຸກຄົນຈະຄິດເຖິງເຮົາຢ່າງພ້ອມໃຈກັນ. ພວກເຂົາບໍ່ໄດ້ຜິດເລີຍທີ່ຈະຄິດແບບນັ້ນ. ຍິ່ງໄປກວ່ານັ້ນ ໃນແນວຄິດຂອງມະນຸດ ຄຳວ່າ "ມະນຸດ" ຈະໝາຍເຖິງມະນຸດຢ່າງແນ່ນອນ; ບໍ່ມີແມ່ນແຕ່ຄົນດຽວທີ່ຈະເຊື່ອມໂຍງມັນກັບສິ່ງອື່ນອີກ. ເມື່ອເວົ້າເຖິງຄຳວ່າ "ຄະນະ" ຜູ້ຄົນຈະຄິດວ່າມັນໝາຍເຖິງການຊຸມນຸມກັນຂອງຫຼາຍຄົນເພື່ອເປັນໜຶ່ງຫົວໜ່ວຍໃນທາງປະຕິບັດ ແລະ ດ້ວຍເຫດນັ້ນ ຈຶ່ງເອີ້ນວ່າ "ຄະນະ". ໃນທີ່ນີ້ ມັນສາມາດເຫັນໄດ້ວ່າ ຄວາມຄິດຂອງມະນຸດລຽບງ່າຍເກີນໄປ; ພວກເຂົາບໍ່ສາມາດເຂົ້າໃຈຄວາມໝາຍຂອງເຮົາເລີຍ. ບັດນີ້ ເຮົາຈະເລີ່ມຕົ້ນສົນທະນາຢ່າງເປັນທາງການວ່າ ມະນຸດທີ່ເປັນຄຣິສຕຽນແບບຄະນະແມ່ນຫຍັງ (ແຕ່ທຸກຄົນຕ້ອງປະຖິ້ມແນວຄິດຂອງພວກເຂົາເອງ; ບໍ່ດັ່ງນັ້ນ ຈະບໍ່ມີຜູ້ໃດໃນບັນດາພວກເຂົາທີ່ຈະສາມາດເຂົ້າໃຈ ແລະ ເຖິງແມ່ນວ່າເຮົາໄດ້ອະທິບາຍຄຳສັບດັ່ງກ່າວ ພວກເຂົາກໍຈະບໍ່ເຊື່ອ ຫຼື ບໍ່ສາມາດເຂົ້າໃຈມັນໄດ້): ທັນທີທີ່ພຣະທຳຂອງເຮົາຖືກກ່າວອອກ, ລູກຊາຍກົກຂອງເຮົາຈະສາມາດປະຕິບັດໂດຍສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ສະແດງເຖິງຄວາມປະສົງຂອງເຮົາສະນັ້ນ ພວກເຂົາຈຶ່ງເປັນຈິດໜຶ່ງໃຈດຽວກັນ ແລະ ມີປາກດຽວກັນ. ໃນຂະນະທີ່ພວກເຂົາຕັດສິນທຸກຊົນຊາດ ແລະ ທຸກຄົນ, ພວກເຂົາຈະສາມາດປະຕິບັດຄວາມຊອບທຳຂອງເຮົາ ແລະ ນຳໃຊ້ບົດບັນຍັດການປົກຄອງຂອງເຮົາ; ພວກເຂົາເປັນການສະແດງເຖິງເຮົາ ແລະ ພວກເຂົາເປັນການສະແດງອອກຂອງເຮົາ. ສະນັ້ນ ມັນຈຶ່ງສາມາດເວົ້າໄດ້ວ່າ ມະນຸດທີ່ເປັນຄຣິສຕຽນແບບຄະນະແມ່ນຂໍ້ແທ້ຈິງທີ່ລູກຊາຍກົກນຳໃຊ້ບົດບັນຍັດການປົກຄອງຂອງເຮົາ; ພວກເຂົາເປັນສິດອຳນາດໃນມືຂອງລູກຊາຍກົກ. ສິ່ງນີ້ແມ່ນລ້ວນແລ້ວແຕ່ກ່ຽວຂ້ອງກັບພຣະຄຣິດ ນັ້ນກໍຄື ຄຳວ່າ "ມະນຸດທີ່ເປັນຄຣິສຕຽນ". ນອກຈາກນັ້ນ

ລູກຊາຍທຸກຄົນສາມາດປະຕິບັດຕາມຄວາມປະສົງຂອງເຮົາ ແລະ ຍ້ອນເຫດຜົນນີ້ ເຮົາຈຶ່ງໃຊ້ຄໍາວ່າ "ຄະນະ". ຄໍາວ່າ "ມະນຸດທີ່ເປັນຄຣິສຕຽນແບບຄະນະ" ໝາຍເຖິງທຸກຄົນທີ່ຢູ່ໃນນາມຂອງເຮົາ; ເວົ້າອີກຢ່າງໜຶ່ງກໍຄື ລູກຊາຍກົກຂອງເຮົາ, ລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາ. ຄໍາວ່າ "ໃໝ່" ໝາຍເຖິງນາມຂອງເຮົາ. ຍ້ອນພວກເຂົາຢູ່ໃນນາມຂອງເຮົາ (ນາມຂອງເຮົາມີທຸກສິ່ງ ແລະ ໃໝ່ຕະຫຼອດການ ແລະ ບໍ່ເຄີຍເກົ່າຈັກເທື່ອ; ມະນຸດຄົນໃດກໍບໍ່ສາມາດປ່ຽນແປງມັນໄດ້) ແລະ ຍ້ອນພວກເຂົາຈະຍັງມີຊີວິດຢູ່ຕະຫຼອດໄປໃນອະນາຄົດ, ພວກເຂົາຈຶ່ງເປັນມະນຸດສາກົນທີ່ເປັນຄົນໃໝ່. ຄໍາວ່າ "ຄະນະ" ໃນທີ່ນີ້ແມ່ນກ່ຽວຂ້ອງກັບຈໍານວນຜູ້ຄົນ ແລະ ມັນບໍ່ໄດ້ຄ້າຍຄືກັບກໍລະນີກ່ອນໜ້າ. ເມື່ອພຣະທໍາຂອງເຮົາຖືກກ່າວອອກມາ ທຸກຄົນກໍຄວນເຊື່ອມັນ. ຢ່າສົງໄສ. ໃຫ້ປະຖິ້ມແນວຄິດຂອງມະນຸດ ແລະ ຄວາມຄິດແບບມະນຸດຂອງພວກເຈົ້າ. ຂະບວນການໃນປັດຈຸບັນຂອງເຮົາທີ່ເປີດເຜີຍຄວາມລຶກລັບແມ່ນຂະບວນການທີ່ກໍາຈັດແນວຄິດ ແລະ ຄວາມຄິດຂອງມະນຸດຢ່າງແທ້ຈິງ (ຍ້ອນຜູ້ຄົນໃຊ້ແນວຄິດຂອງພວກເຂົາເອງເພື່ອວັດແທກເຮົາ ແລະ ວັດແທກສິ່ງທີ່ເຮົາເວົ້າ, ເຮົາໃຊ້ຄວາມລຶກລັບທີ່ຖືກເປີດເຜີຍຂອງເຮົາເອງເພື່ອກໍາຈັດແນວຄິດ ແລະ ຄວາມຄິດຂອງມະນຸດ). ໃນອີກບໍ່ດົນພາລະກິດນີ້ກໍຈະສໍາເລັດ. ເມື່ອຄວາມລຶກລັບຂອງເຮົາຖືກເປີດເຜີຍອອກຈົນເຖິງລະດັບໃດໜຶ່ງ, ຜູ້ຄົນກໍຈະເກືອບບໍ່ມີຂະບວນການຄວາມຄິດກ່ຽວກັບພຣະທໍາຂອງເຮົາອີກຕໍ່ໄປ ແລະ ພວກເຂົາຈະເຊົາວັດແທກເຮົາໂດຍໃຊ້ແນວຄິດແບບມະນຸດຂອງພວກເຂົາ. ສິ່ງທີ່ພວກເຂົາຄິດໃນແຕ່ລະມື້, ເຮົາຈະເປີດເຜີຍ ແລະ ເຮົາຈະໂຈມຕີຄືນ. ໃນຈຸດໃດໜຶ່ງ ຜູ້ຄົນຈະບໍ່ຄິດອີກຕໍ່ໄປ; ຫົວຂອງພວກເຂົາຈະປາສະຈາກຄວາມຄິດທຸກຢ່າງ ແລະ ພວກເຂົາຈະຍອມຕໍ່ພຣະທໍາຂອງເຮົາຢ່າງສົມບູນ. ນັ້ນຈະເປັນເວລາທີ່ພວກເຈົ້າຈະເຂົ້າສູ່ໂລກຝ່າຍວິນຍານ. ນີ້ແມ່ນບາດກ້າວໜຶ່ງໃນພາລະກິດຂອງເຮົາ ເຊິ່ງມາກ່ອນທີ່ເຮົາຈະອະນຸຍາດໃຫ້ພວກເຈົ້າເຂົ້າສູ່ໂລກຝ່າຍວິນຍານ. ພວກເຈົ້າຕ້ອງກໍາຈັດແນວຄິດແບບມະນຸດທັງໝົດອອກຈາກຕົນເອງ ກ່ອນທີ່ພວກເຈົ້າຈະສາມາດບໍລິສຸດ ແລະ ໄຮ້ມົນທິນ ແລະ ເຂົ້າສູ່ໂລກຝ່າຍວິນຍານໄດ້. ນີ້ແມ່ນຄວາມໝາຍຂອງຄໍາວ່າ "ເຮົາເປັນຮ່າງກາຍຝ່າຍວິນຍານທີ່ບໍລິສຸດ". ເຖິງຢ່າງໃດກໍຕາມ ພວກເຈົ້າຕ້ອງປະຕິບັດຕາມບາດກ້າວຂອງເຮົາ ແລະ ກ່ອນທີ່ພວກເຈົ້າຈະຮັບຮູ້ມັນໄດ້ ເວລາຂອງເຮົາກໍຈະມາເຖິງ.

# ບົດທີ 107

ເມື່ອພຣະທຳຂອງເຮົາໄປເຖິງຄວາມຮຸນແຮງລະດັບໃດໜຶ່ງ, ຄົນສ່ວນໃຫຍ່ກໍຖອນຕົວ ຍ້ອນພຣະທຳເຫຼົ່ານັ້ນ ແລະ ມັນຢູ່ໃນຊ່ວງເວລານີ້ແທ້ໆທີ່ລູກຊາຍກົກຂອງເຮົາຖືກເປີດເຜີຍ. ເຮົາໄດ້ເວົ້າວ່າເຮົາບໍ່ໄດ້ຍົກນິ້ວມືນິ້ວດຽວ ແຕ່ໃຊ້ພຽງພຣະທຳຂອງເຮົາເພື່ອບັນລຸທຸກສິ່ງ. ດ້ວຍພຣະທຳຂອງເຮົາ, ເຮົາຈະທຳລາຍທຸກສິ່ງທີ່ເຮົາກຽດຊັງ ແລະ ເຮົາຍັງໃຊ້ພຣະທຳເຫຼົ່ານັ້ນເພື່ອເຮັດໃຫ້ລູກຊາຍກົກຂອງເຮົາສົມບູນ. (ເມື່ອພຣະທຳຂອງເຮົາຖືກກ່າວອອກມາ, ສຽງຟ້າຮ້ອງທັງເຈັດກໍຈະດັງຂຶ້ນ ແລະ ໃນຊ່ວງເວລານັ້ນ ລູກຊາຍກົກຂອງເຮົາ ແລະ ເຮົາຈະປ່ຽນຮູບຮ່າງ ແລະ ເຂົ້າສູ່ໂລກຝ່າຍວິນຍານ). ເມື່ອເຮົາເວົ້າວ່າ ພຣະວິນຍານຂອງເຮົາປະຕິບັດພາລະກິດເປັນການສ່ວນຕົວ, ເຮົາກໍໝາຍຄວາມວ່າ ພຣະທຳຂອງເຮົາບັນລຸທຸກສິ່ງ ແລະ ຈາກນີ້ ມັນກໍປາກົດແຈ້ງແລ້ວວ່າເຮົາມີລິດທານຸພາບສູງສຸດ. ສະນັ້ນ ຄົນໃດໜຶ່ງສາມາດເຫັນດ້ວຍຄວາມຊັດເຈນທີ່ຫຼາຍຍິ່ງຂຶ້ນເຖິງເປົ້າໝາຍ ແລະ ຈຸດປະສົງທີ່ຢູ່ເບື້ອງຫຼັງແຕ່ລະປະໂຫຍກທີ່ເຮົາກ່າວອອກມາ. ດັ່ງທີ່ເຮົາໄດ້ເວົ້າກ່ອນໜ້ານີ້, ທຸກສິ່ງທີ່ເຮົາສິ່ງສຽງອອກມາພາຍໃນຄວາມເປັນມະນຸດຂອງເຮົາແມ່ນລັກສະນະການສະແດງອອກຂອງເຮົາ. ສະນັ້ນ ຄົນເຫຼົ່ານັ້ນທີ່ບໍ່ສາມາດແນ່ໃຈ ແລະ ຜູ້ທີ່ບໍ່ເຊື່ອໃນສິ່ງທີ່ເຮົາກ່າວຢູ່ພາຍໃນຄວາມເປັນມະນຸດທີ່ທຳມະດາຂອງເຮົາຢ່າງແທ້ຈິງຕ້ອງຖືກກຳຈັດອອກ! ເຮົາໄດ້ເນັ້ນຍໍ້າຢ່າງຊໍ້າໄປຊໍ້າມາວ່າ ຄວາມເປັນມະນຸດທີ່ປົກກະຕິຂອງເຮົາແມ່ນລັກສະນະທີ່ບໍ່ສາມາດຂາດໄດ້ໃນຄວາມເປັນພຣະເຈົ້າທີ່ສົມບູນຂອງເຮົາ, ແຕ່ຫຼາຍຄົນກໍສືບຕໍ່ໃຫ້ຄວາມສຳຄັນໃນຄວາມເປັນພຣະເຈົ້າຂອງເຮົາ ໃນຂະນະທີ່ປະຕິເສດຄວາມເປັນມະນຸດຂອງເຮົາ. ພວກເຈົ້າຊ່າງຕາບອດ! ເຈົ້າເວົ້າວ່າເຮົາບໍ່ສອດຄ່ອງກັບແນວຄິດຂອງເຈົ້າ ແລະ ມະນຸດທີ່ເຮົາເປັນກໍບໍ່ສອດຄ່ອງກັບພຣະເຈົ້າຂອງເຈົ້າ. ຜູ້ຄົນເຫຼົ່ານີ້ສາມາດຢູ່ໃນອານາຈັກຂອງເຮົາໄດ້ບໍ? ເຮົາຈະຢຽບຢໍ່າເຈົ້າໃຕ້ຕີນຂອງເຮົາ! ເຮົາທ້າໃຫ້ເຈົ້າກະບົດຕໍ່ເຮົາອີກ! ເຮົາທ້າໃຫ້ເຈົ້າສືບຕໍ່ເຮັດສິ່ງທີ່ດື້ດ້ານເຫຼົ່ານັ້ນ! ຮອຍຍິ້ມຂອງເຮົາບໍ່ເໝາະສົມກັບແນວຄິດຂອງເຈົ້າ, ຄຳເວົ້າຂອງເຮົາບໍ່ໄດ້ມ່ວນຫູຂອງເຈົ້າ ແລະ ການກະທຳຂອງເຮົາບໍ່ໄດ້ເປັນປະໂຫຍດຕໍ່ເຈົ້າ, ເຮົາເວົ້າຖືກບໍ? ທຸກສິ່ງເຫຼົ່ານີ້ຕ້ອງເປັນສິ່ງທີ່ເຈົ້າມັກ. ນັ້ນແມ່ນສິ່ງທີ່ພຣະເຈົ້າເປັນບໍ? ແລ້ວຜູ້ຄົນເຫຼົ່ານີ້ຍັງຕ້ອງການຢູ່ໃນເຮືອນຂອງເຮົາ ແລະ ຮັບເອົາພອນໃນອານາຈັກຂອງເຮົາບໍ? ເຈົ້າບໍ່ໄດ້ກຳລັງຝັນກາງເວັນບໍ? ສິ່ງເຫຼົ່ານີ້ເລີ່ມອັດສະຈັນຕັ້ງແຕ່ຕອນໃດເດ! ເຈົ້າຕ້ອງການທີ່ຈະບໍ່ເຊື່ອຟັງເຮົາ, ແຕ່ເຈົ້າກໍຍັງປາຖະໜາທີ່ຈະໄດ້ຮັບພອນຈາກເຮົາ. ເຮົາເວົ້າກັບເຈົ້າວ່າ: ບໍ່ຢ່າງເດັດຂາດ! ດັ່ງທີ່ເຮົາໄດ້ເວົ້າໃນຫຼາຍໆຄັ້ງ, ຄົນທີ່ເຂົ້າສູ່ອານາຈັກຂອງເຮົາ ແລະ ຮັບພອນແມ່ນຕ້ອງເປັນຄົນທີ່ເຮົາຮັກ. ເປັນຫຍັງເຮົາຈຶ່ງເນັ້ນຢໍ້າພຣະທຳເຫຼົ່ານີ້? ເຮົາຮູ້ ແລະ ເຂົ້າໃຈວ່າທຸກຄົນກຳລັງຄິດຫຍັງ; ບໍ່ຈຳເປັນຕ້ອງໃຫ້ເຮົາຊີ້ແຈງເຖິງຄວາມຄິດຂອງພວກເຂົາເທື່ອລະຄົນ. ຮູບຮ່າງທີ່ແທ້ຈິງຂອງພວກເຂົາຈະຖືກເປີດເຜີຍຜ່ານພຣະທຳແຫ່ງການພິພາກສາຂອງເຮົາ ແລະ ທຸກຄົນຈະຮ້ອງໄຫ້ດ້ວຍຄວາມໂສກເສົ້າ ຕໍ່ໜ້າບັນລັງແຫ່ງການພິພາກສາຂອງເຮົາ. ນີ້ຄືຂໍ້ແທ້ຈິງທີ່ຊັດເຈນເຊິ່ງບໍ່ມີຜູ້ໃດສາມາດປ່ຽນແປງໄດ້! ໃນທີ່ສຸດແລ້ວ ເຮົາຈະໃຫ້ພວກເຂົາເຂົ້າສູ່ຂຸມເລິກທີ່ບໍ່ສິ້ນສຸດເທື່ອລະຄົນ. ນີ້ແມ່ນ

ຜົນສຸດທ້າຍທີ່ເຮົາປາຖະໜາຈະບັນລຸດ້ວຍການທີ່ເຮົາພິພາກສາຊາຕານທີ່ຊົ່ວຮ້າຍ. ເຮົາຕ້ອງໃຊ້ການພິພາກສາ ແລະ ບົດບັນຍັດການປົກຄອງເພື່ອປະຕິບັດກັບແຕ່ລະຄົນ ແລະ ນີ້ແມ່ນວິທີທີ່ເຮົາຂ້ຽນຕີຜູ້ຄົນ. ພວກເຈົ້າມີຄວາມເຂົ້າໃຈໃນເລື່ອງນີ້ບໍ? ເຮົາບໍ່ຈຳເປັນຕ້ອງໃຫ້ເຫດຜົນແກ່ຊາຕານ; ເຮົາພຽງແຕ່ໃຊ້ທ່ອນເຫຼັກຂອງເຮົາເພື່ອຂ້ຽນຕີມັນຈົນມັນຈະໃກ້ຕາຍ ແລະ ຮ້ອງຂໍຄວາມເມດຕາຊໍ້າແລ້ວຊໍ້າອີກ. ສະນັ້ນ ເມື່ອຜູ້ຄົນອ່ານພຣະທຳແຫ່ງການພິພາກສາຂອງເຮົາ, ພວກເຂົາກໍບໍ່ສາມາດເຂົ້າໃຈພຣະທຳເຫຼົ່ານີ້ໄດ້ແມ່ນແຕ່ໜ້ອຍດຽວ, ແຕ່ຈາກທັດສະນະຂອງເຮົາ ທຸກຂໍ້ຄວາມ ແລະ ທຸກປະໂຫຍກແມ່ນການນຳໃຊ້ບົດບັນຍັດການປົກຄອງຂອງເຮົາ. ນີ້ແມ່ນຂໍ້ແທ້ຈິງທີ່ຊັດເຈນ.

ຍ້ອນເຮົາໄດ້ກ່າວເຖິງການພິພາກສາໃນມື້ນີ້, ຫົວຂໍ້ນີ້ຈຶ່ງກ່ຽວຂ້ອງກັບບ່ອນນັ່ງແຫ່ງການພິພາກສາ. ໃນອະດີດ ພວກເຈົ້າເວົ້າຢູ່ເລື້ອຍໆວ່າ ພວກເຈົ້າຈະຮັບການພິພາກສາຕໍ່ໜ້າບັນລັງຂອງພຣະຄຣິດ. ພວກເຈົ້າມີຄວາມເຂົ້າໃຈບາງຢ່າງກ່ຽວກັບການພິພາກສາ ແຕ່ພວກເຈົ້າບໍ່ສາມາດຈິນຕະນາການເຖິງບັນລັງແຫ່ງການພິພາກສາ. ບາງເທື່ອ ບາງຄົນຄິດວ່າບັນລັງແຫ່ງການພິພາກສາແມ່ນສິ່ງຂອງທາງກາຍ ຫຼື ພວກເຂົາອາດຈິນຕະນາການວ່າ ມັນເປັນໂຕະໃຫຍ່ ຫຼື ບາງເທື່ອກໍມະໂນພາບວ່າມັນເປັນບ່ອນນັ່ງຂອງຜູ້ພິພາກສາຄືກັບທີ່ຢູ່ໃນທາງໂລກ. ແນ່ນອນ ໃນການອະທິບາຍຂອງເຮົາໃນຄັ້ງນີ້ ເຮົາຈະບໍ່ປະຕິເສດສິ່ງທີ່ພວກເຈົ້າໄດ້ເວົ້າເຖິງ ແຕ່ສຳລັບເຮົາແລ້ວ ສິ່ງຕ່າງໆທີ່ຢູ່ໃນຈິນຕະນາການຂອງຜູ້ຄົນຍັງມີຄວາມໝາຍທາງສັນຍາລັກ. ສະນັ້ນ ຮ່ອງຊ່ອງວ່າງລະຫວ່າງສິ່ງທີ່ຜູ້ຄົນຈິນຕະນາການ ແລະ ຄວາມໝາຍຂອງເຮົາກໍຍັງກວ້າງໃຫຍ່ຄືກັບຢູ່ລະຫວ່າງສະຫວັນ ແລະ ແຜ່ນດິນໂລກ. ໃນແນວຄິດຂອງຜູ້ຄົນແມ່ນມີຫຼາຍຄົນທີ່ນອນລົງກົ້ມກາບຕໍ່ໜ້າບັນລັງແຫ່ງການພິພາກສາ, ຮ້ອງໄຫ້ດ້ວຍຄວາມໂສກເສົ້າ ແລະ ອ້ອນວອນຂໍຄວາມເມດຕາ. ໃນສິ່ງນີ້ ຈິນຕະນາການຂອງມະນຸດໄດ້ໄປເຖິງຈຸດສູງສຸດຂອງມັນ ແລະ ບໍ່ມີຜູ້ໃດສາມາດຈິນຕະນາການຫຍັງໄດ້ອີກນອກຈາກສິ່ງນັ້ນ. ແລ້ວແມ່ນຫຍັງຄືບັນລັງແຫ່ງການພິພາກສາ? ກ່ອນທີ່ເຮົາຈະເປີດເຜີຍຄວາມລຶກລັບນີ້, ພວກເຈົ້າຕ້ອງປະຕິເສດທຸກຄວາມຄິດຜິດໆທີ່ພວກເຈົ້າມີກ່ອນໜ້າ; ມີແຕ່ເມື່ອນັ້ນ ເປົ້າໝາຍຂອງເຮົາຈຶ່ງຈະຖືກບັນລຸ. ນີ້ແມ່ນວິທີດຽວທີ່ແນວຄິດ ແລະ ຄວາມຄິດຂອງພວກເຈົ້າກ່ຽວກັບຫົວຂໍ້ນີ້ສາມາດຖືກກຳຈັດ. ເມື່ອໃດກໍຕາມທີ່ເຮົາເວົ້າ, ພວກເຈົ້າຕ້ອງໃສ່ໃຈ. ພວກເຈົ້າຕ້ອງບໍ່ປະໝາດອີກຕໍ່ໄປ. ບັນລັງແຫ່ງການພິພາກສາຂອງເຮົາໄດ້ຖືກກໍ່ຕັ້ງຂຶ້ນ ຕັ້ງແຕ່ການເນລະມິດສ້າງໂລກ. ໃນຍຸກ ແລະ ຮຸ່ນຕ່າງໆທີ່ຜ່ານໄປ, ຫຼາຍຄົນໄດ້ຕາຍຕໍ່ໜ້າບັນລັງ ແລະ ຫຼາຍຄົນໄດ້ລຸກຂຶ້ນຕໍ່ໜ້າບັນລັງເຊັ່ນກັນ ໂດຍກັບຄືນມາມີຊີວິດ. ມັນສາມາດເວົ້າໄດ້ວ່າຕັ້ງແຕ່ຈຸດເລີ່ມຕົ້ນຈົນເຖິງຈຸບຈົບ, ການພິພາກສາຂອງເຮົາບໍ່ເຄີຍຢຸດເຊົາ ແລະ ດ້ວຍເຫດນັ້ນ ບັນລັງແຫ່ງການພິພາກສາຂອງເຮົາກໍຄົງຢູ່ສະເໝີ. ເມື່ອໃດກໍຕາມທີ່ກ່າວເຖິງບັນລັງແຫ່ງການພິພາກສາ ມະນຸດທຸກຄົນກໍຮູ້ສຶກເຖິງຮ່ອງຮອຍແຫ່ງຄວາມຢ້ານກົວ. ແນ່ນອນ ຈາກສິ່ງທີ່ເຮົາເວົ້າມາຂ້າງເທິງ ພວກເຈົ້າບໍ່ຮູ້ວ່າບັນລັງແຫ່ງການພິພາກສານີ້ແມ່ນຫຍັງ. ບັນລັງແຫ່ງການພິພາກສາມີຢູ່ຮ່ວມກັບການພິພາກສາ, ແຕ່ພວກມັນເປັນທາດແທ້ສອງປະເພດທີ່ແຕກຕ່າງກັນ. (ໃນທີ່ນີ້ "ທາດແທ້" ບໍ່ໄດ້ໝາຍເຖິງສິ່ງຂອງທາງກາຍ, ແຕ່ໝາຍເຖິງພຣະທຳ. ມະນຸດບໍ່ສາມາດເຫັນທາດແທ້ນີ້ເລີຍ).

ການພິພາກສາໝາຍເຖິງພຣະທຳຂອງເຮົາ. (ບໍ່ວ່າພວກມັນຈະຮຸນແຮງ ຫຼື ອ່ອນໂຍນ, ພວກມັນກໍ ລ້ວນແລ້ວແຕ່ປະກອບຢູ່ໃນການພິພາກສາຂອງເຮົາ. ສະນັ້ນ ສິ່ງໃດກໍຕາມທີ່ອອກຈາກປາກຂອງເຮົາ ແມ່ນການພິພາກສາ). ແຕ່ກ່ອນ ຜູ້ຄົນແບ່ງແຍກພຣະທຳຂອງເຮົາອອກເປັນຫຼາຍປະເພດທີ່ແຕກຕ່າງ ກັນ ເຊິ່ງລວມເຖິງພຣະທຳແຫ່ງການພິພາກສາ, ພຣະທຳແຫ່ງຄວາມອ່ອນໂຍນ ແລະ ພຣະທຳທີ່ ສະໜອງໃຫ້ແກ່ຊີວິດ. ມື້ນີ້ ເຮົາຈະຊີ້ແຈງໃຫ້ແກ່ພວກເຈົ້າວ່າ ການພິພາກສາ ແລະ ພຣະຄຳຂອງເຮົາມີ ຄວາມເຊື່ອມໂຍງກັນ. ນັ້ນກໍຄື ການພິພາກສາແມ່ນພຣະທຳຂອງເຮົາ ແລະ ພຣະທຳຂອງເຮົາແມ່ນການ ພິພາກສາ; ເຈົ້າຕ້ອງບໍ່ເຖິງພວກມັນໂດຍແຍກຈາກກັນເດັດຂາດ. ຜູ້ຄົນຈິນຕະນາການວ່າ ພຣະທຳທີ່ ຮຸນແຮງແມ່ນການພິພາກສາ, ແຕ່ຄວາມເຂົ້າໃຈຂອງພວກເຂົາກໍບໍ່ຄົບຖ້ວນ. ທຸກສິ່ງທີ່ເຮົາເວົ້າແມ່ນ ການພິພາກສາ. ການເລີ່ມຕົ້ນຂອງການພິພາກສາທີ່ຖືກກ່າວເຖິງໃນອະດີດແມ່ນໝາຍເຖິງເວລາທີ່ ພຣະວິນຍານຂອງເຮົາເລີ່ມປະຕິບັດພາລະກິດໃນທຸກຫົນແຫ່ງຢ່າງເປັນທາງການ ແລະ ນຳໃຊ້ບົດ ບັນຍັດການປົກຄອງຂອງເຮົາ. ໃນປະໂຫຍກນີ້, ຄຳວ່າ "ການພິພາກສາ" ໝາຍເຖິງຄວາມເປັນຈິງແທ້ໆ. ບັດນີ້ ເຮົາຈະອະທິບາຍເຖິງບັນລັງແຫ່ງການພິພາກສາ. ເປັນຫຍັງເຮົາຈຶ່ງເວົ້າວ່າ ບັນລັງແຫ່ງການ ພິພາກສາເປັນຢູ່ຊົ່ວນິດນິລັນດອນ ແລະ ດຳເນີນໄປຢ່າງຄຽງຂ້າງກັບການພິພາກສາຂອງເຮົາ? ພວກເຈົ້າ ໄດ້ຮັບຄວາມເຂົ້າໃຈບາງຢ່າງກ່ຽວກັບບັນລັງ ຫຼັງຈາກທີ່ເຮົາໄດ້ອະທິບາຍເຖິງການພິພາກສາບໍ? ບັນລັງແຫ່ງການພິພາກສາໝາຍເຖິງມະນຸດທີ່ເຮົາເປັນ. ຈາກຊົ່ວນິດນິລັນດອນ, ເຮົາກ່າວ ແລະ ເວົ້າຢູ່ ສະເໝີ. ເຮົາດຳລົງຊີວິດຢູ່ຕະຫຼອດໄປ, ສະນັ້ນ ບັນລັງແຫ່ງການພິພາກສາຂອງເຮົາ ແລະ ການພິພາກສາ ຂອງເຮົາກໍຢູ່ຮ່ວມກັນຊົ່ວນິດນິລັນ. ສິ່ງນີ້ຄວນຊັດເຈນໃນຕອນນີ້! ໃນຈິນຕະນາການຂອງຜູ້ຄົນ, ພວກເຂົາປະຕິບັດຕໍ່ເຮົາດັ່ງວັດຖຸ, ແຕ່ໃນເລື່ອງນີ້ ເຮົາບໍ່ໄດ້ຕຳນິພວກເຈົ້າ ຫຼື ກ່າວຮ້າຍພວກເຈົ້າ. ເຮົາພຽງແຕ່ຫວັງວ່າ ພວກເຈົ້າຈະເຊື່ອຟັງ ແລະ ຍອມຮັບການເປີດເຜີຍຂອງເຮົາ ແລະ ຮູ້ຈາກສິ່ງນີ້ວ່າ ເຮົາເປັນພຣະເຈົ້າທີ່ປົກຄຸມທຸກສິ່ງ.

ມະນຸດບໍ່ສາມາດເຂົ້າໃຈພຣະທຳຂອງເຮົາໄດ້ຢ່າງສິ້ນເຊີງ, ບາດກ້າວຂອງເຮົາແມ່ນເປັນໄປບໍ່ໄດ້ ທີ່ພວກເຂົາຈະພົບເຫັນ ແລະ ຄວາມປະສົງຂອງເຮົາກໍເປັນໄປບໍ່ໄດ້ທີ່ຈະໃຫ້ພວກເຂົາເຂົ້າໃຈໄດ້. ສະນັ້ນ ສະພາວະທີ່ພວກເຈົ້າຢູ່ໃນປັດຈຸບັນ (ການທີ່ສາມາດຮັບເອົາການເປີດເຜີຍຂອງເຮົາ, ເຂົ້າໃຈ ຄວາມປະສົງຂອງເຮົາຈາກພາຍໃນສະພາວະນັ້ນ ແລະ ຕິດຕາມບາດກ້າວຂອງເຮົາຜ່ານສະພາວະນັ້ນ) ແມ່ນຜົນຈາກການກະທຳທີ່ອັດສະຈັນຂອງເຮົາ, ຄວາມກະລຸນາຂອງເຮົາ ແລະ ຄວາມເຫັນອົກເຫັນໃຈ ຂອງເຮົາທັງສິ້ນ. ມື້ໜຶ່ງ ເຮົາຈະເຖິງກັບເຮັດໃຫ້ພວກເຈົ້າໄດ້ເຫັນສະຕິປັນຍາຂອງເຮົາ, ຫຼຽວເບິ່ງສິ່ງທີ່ ເຮົາໄດ້ເຮັດດ້ວຍມືຂອງເຮົາ ແລະ ຈ້ອງເບິ່ງສິ່ງອັດສະຈັນໃນພາລະກິດຂອງເຮົາ. ເມື່ອເວລານັ້ນມາເຖິງ, ແບບສ້າງຂອງແຜນການຄຸ້ມຄອງທັງປວງຂອງເຮົາຈະຖືກເປີດເຜີຍອອກຕໍ່ຕາຂອງພວກເຈົ້າທັງສິ້ນ. ທົ່ວທັງໂລກຈັກກະວານ ແລະ ທຸກມື້, ສ່ວນຕ່າງໆແຫ່ງການກະທຳທີ່ອັດສະຈັນຂອງເຮົາໄດ້ປາກົດ ອອກ ແລະ ທຸກຄົນໃຫ້ບໍລິການເພື່ອໃຫ້ແຜນການຄຸ້ມຄອງຂອງເຮົາຖືກເຮັດໃຫ້ສຳເລັດ. ເມື່ອສິ່ງນີ້ໄດ້ ຖືກເປີດເຜີຍອອກຢ່າງສົມບູນ, ພວກເຈົ້າຈະເຫັນວ່າເຮົາໄດ້ຈັດແຈງຄົນປະເພດໃດເພື່ອໃຫ້ການບໍລິການ,

ເຮົາໄດ້ຈັດແຈງຄົນປະເພດໃດເພື່ອປະຕິບັດຕາມຄວາມປະສົງຂອງເຮົາ, ເຮົາໄດ້ບັນລຸຫຍັງຜ່ານການຊູດຣິດຊາຕານ, ເຮົາໄດ້ສຳເລັດຫຍັງດ້ວຍຕົວເຮົາເອງ, ຄົນປະເພດໃດທີ່ກຳລັງຮ້ອງໄຫ້, ຄົນປະເພດໃດທີ່ກຳລັງກັດແຂ້ວຂອງພວກເຂົາ, ຄົນປະເພດໃດຈະທົນທຸກກັບຄວາມພິນາດ ແລະ ຄົນປະເພດໃດທີ່ຈະທົນທຸກກັບຄວາມຫາຍະນະ. ດ້ວຍຄຳວ່າ "ຄວາມພິນາດ" ເຮົາກຳລັງໝາຍເຖິງຄົນທີ່ຈະຖືກໂຍນລົງສູ່ທະເລສາບແຫ່ງໄຟ ແລະ ມາດ ແລະ ຈະຖືກເຜົາໄໝ້ທັງສິ້ນ; ດ້ວຍຄຳວ່າ "ຄວາມຫາຍະນະ" ເຮົາໝາຍເຖິງຄົນທີ່ຈະຖືກໂຍນລົງສູ່ຂຸມເລິກທີ່ບໍ່ສິ້ນສຸດເພື່ອທຸກທໍລະມານໃນທີ່ນັ້ນຕະຫຼອດໄປເປັນນິດ. ສະນັ້ນ ຢ່າເຂົ້າໃຈຜິດວ່າຄວາມພິນາດ ແລະ ຄວາມຫາຍະນະເປັນສິ່ງດຽວກັນ; ໃນທາງກົງກັນຂ້າມທັງສອງຢ່າງແມ່ນແຕກຕ່າງກັນຫຼາຍ. ຜູ້ໃຫ້ບໍລິການທີ່ອອກຈາກນາມຂອງເຮົາໃນມື້ນີ້ຈະທົນທຸກກັບຄວາມຫາຍະນະ ແລະ ຄົນທີ່ບໍ່ໄດ້ມາຈາກນາມຂອງເຮົາຈະທົນທຸກກັບຄວາມພິນາດ. ນີ້ຄືເຫດຜົນທີ່ເຮົາເວົ້າວ່າ ຄົນທີ່ທົນທຸກກັບຄວາມຫາຍະນະຈະສັນລະເສີນເຮົາຕະຫຼອດໄປເປັນນິດຫຼັງຈາກການພິພາກສາຂອງເຮົາ; ແລະ ເຖິງຢ່າງໃດກໍຕາມ ຄົນເຫຼົ່ານີ້ຈະບໍ່ເປັນອິດສະຫຼະຈາກການຂ້ຽນຕີຂອງເຮົາຈັກເທື່ອ ແລະ ຈະຍອມຮັບກົດລະບຽບຂອງເຮົາຢູ່ສະເໝີ. ນີ້ຄືເຫດຜົນທີ່ເຮົາວ່າ ຂຸມເລິກທີ່ບໍ່ສິ້ນສຸດແມ່ນມືທີ່ເຮົາໃຊ້ເພື່ອຂ້ຽນຕີຜູ້ຄົນ. ເຮົາຍັງເວົ້າວ່າ ທຸກຄົນຢູ່ໃນມືຂອງເຮົາ. ເຖິງແມ່ນເຮົາໄດ້ເວົ້າວ່າ "ຂຸມເລິກທີ່ບໍ່ສິ້ນສຸດ" ໝາຍເຖິງອິດທິພົນຂອງຊາຕານ, ມັນກໍຍັງຢູ່ໃນມືຂອງເຮົາ ເຊິ່ງເຮົາໃຊ້ເພື່ອຂ້ຽນຕີຜູ້ຄົນ. ສະນັ້ນ ທຸກຄົນຢູ່ໃນມືຂອງເຮົາ ແລະ ບໍ່ມີຂໍ້ໂຕ້ແຍ້ງໃດໆ. ພຣະທຳຂອງເຮົາບໍ່ໄດ້ຂາດຄວາມຮັບຜິດຊອບ; ພຣະທຳເຫຼົ່ານັ້ນລ້ວນແລ້ວແຕ່ເໝາະສົມ ແລະ ເຊື່ອມໂຍງກັນ. ພວກມັນບໍ່ໄດ້ຖືກສ້າງຂຶ້ນ ຫຼື ໄຮ້ຄວາມໝາຍ ແລະ ທຸກຄົນຄວນເຊື່ອພຣະຄຳຂອງເຮົາ. ໃນອະນາຄົດ ພວກເຈົ້າຈະທົນທຸກຍ້ອນສິ່ງນີ້. ຍ້ອນພຣະທຳຂອງເຮົາ, ຫຼາຍຄົນໄດ້ເຢັນຊາ ຫຼື ພວກເຂົາສິ້ນຫວັງ ຫຼື ຜິດຫວັງ ຫຼື ຮ້ອງໄຫ້ຢ່າງຂົມຂື່ນ ຫຼື ຮ້ອງໄຫ້ຄໍ່າຄວນ. ຈະມີການຕອບໂຕ້ທຸກລັກສະນະ. ມື້ໜຶ່ງ ເມື່ອທຸກຄົນທີ່ເຮົາຊັງຖອນຕົວ, ພາລະກິດທີ່ຍິ່ງໃຫຍ່ຂອງເຮົາກໍຈະສຳເລັດລົງ. ໃນອະນາຄົດ ຫຼາຍຄົນຈະລົ້ມລົງ ຍ້ອນລູກຊາຍກົກ ແລະ ໃນທີ່ສຸດແລ້ວ ພວກເຂົາທຸກຄົນຈະຈາກໄປ ເທື່ອລະໜຶ່ງກ້າວ. ເວົ້າອີກຢ່າງໜຶ່ງກໍຄືເຮືອນຂອງເຮົາຈະບໍລິສຸດຂຶ້ນເທື່ອລະໜ້ອຍ ແລະ ມານຮ້າຍທຸກຮູບແບບຈະຖອຍອອກຈາກຂ້າງກາຍຂອງເຮົາເທື່ອລະໜ້ອຍ, ຈາກໄປຢ່າງງຽບໆ, ໂດຍຍອມຈຳນົນ ແລະ ບໍ່ຕໍ່ວ່າແມ່ນແຕ່ຄຳດຽວ. ຫຼັງຈາກນັ້ນ ລູກຊາຍກົກທັງໝົດຂອງເຮົາຈະຖືກເປີດເຜີຍ ແລະ ເຮົາຈະເລີ່ມຕົ້ນບາດກ້າວຕໍ່ໄປໃນພາລະກິດຂອງເຮົາ. ມີແຕ່ເມື່ອນັ້ນ ລູກຊາຍກົກຂອງເຮົາຈຶ່ງຈະເປັນກະສັດກັບເຮົາ ແລະ ປົກຄອງຢູ່ເໜືອຈັກກະວານທັງປວງ. ສິ່ງເຫຼົ່ານີ້ແມ່ນບາດກ້າວໃນພາລະກິດຂອງເຮົາ ແລະ ພວກມັນປະກອບເປັນສ່ວນທີ່ສຳຄັນຂອງແຜນການຄຸ້ມຄອງຂອງເຮົາ. ຢ່າເບິ່ງຂ້າມສິ່ງນີ້; ບໍ່ດັ່ງນັ້ນ ເຈົ້າຈະເຮັດຜິດພາດ.

ເວລາທີ່ພຣະທຳຂອງເຮົາຖືກເປີດເຜີຍໃຫ້ແກ່ພວກເຈົ້າແມ່ນເວລາທີ່ເຮົາເລີ່ມຕົ້ນພາລະກິດຂອງເຮົາ. ຈະບໍ່ມີພຣະທຳຂອງເຮົາແມ່ນແຕ່ຂໍ້ດຽວທີ່ຈະຖືກປະໄວ້ໂດຍບໍ່ໄດ້ຖືກປະຕິບັດ. ສຳລັບເຮົາແລ້ວມື້ໜຶ່ງເປັນຄືກັບໜຶ່ງພັນປີ ແລະ ໜຶ່ງພັນປີເປັນຄືກັບໜຶ່ງມື້. ພວກເຈົ້າເບິ່ງມັນແນວໃດ? ແນວຄວາມຄິດຂອງພວກເຈົ້າກ່ຽວກັບເວລາແມ່ນແຕກຕ່າງຈາກຂອງເຮົາ ເພາະເຮົາຄວບຄຸມໂລກຈັກກະວານ

ແລະ ເຮົາເຮັດໃຫ້ທຸກສິ່ງສຳເລັດ. ພາລະກິດຂອງເຮົາຖືກດຳເນີນໃນແຕ່ລະມື້, ເທື່ອລະບາດກ້າວ ແລະ ເທື່ອລະຂັ້ນຕອນ; ຍິ່ງໄປກວ່ານັ້ນ ການກ້າວໄປຂ້າງໜ້າຂອງພາລະກິດຂອງເຮົາບໍ່ໄດ້ຢຸດແມ່ນແຕ່ໜຶ່ງວິນາທີດຽວ: ໃນທຸກຊ່ວງເວລາ ມັນຖືກປະຕິບັດຢູ່ຢ່າງສະໝໍ່າສະເໝີ. ພຣະທຳຂອງເຮົາບໍ່ເຄີຍຖືກກໍ່ກວນ ນັບຕັ້ງແຕ່ການເນລະມິດສ້າງໂລກ. ເຮົາໄດ້ສືບຕໍ່ເວົ້າ ແລະ ກ່າວພຣະຄຳຂອງເຮົາຈົນເຖິງມື້ນີ້; ສິ່ງນີ້ຈະບໍ່ປ່ຽນແປງໄປໃນອະນາຄົດ. ເຖິງຢ່າງໃດກໍຕາມ ເວລາຂອງເຮົາຖືກຈັດແຈງ ແລະ ຈັດການຢ່າງລະມັດລະວັງ ແລະ ມັນເປັນລະບົບລະບຽບຫຼາຍ. ເຮົາຈະເຮັດໃນສິ່ງທີ່ເຮົາຈຳເປັນຕ້ອງເຮັດ ເມື່ອເຮົາຈຳເປັນຕ້ອງເຮັດມັນ (ດ້ວຍເຮົາ ທຸກສິ່ງຈະຖືກປົດປ່ອຍ; ທຸກສິ່ງຈະເປັນອິດສະຫຼະ) ແລະ ເມື່ອເວົ້າເຖິງບາດກ້າວໃນພາລະກິດຂອງເຮົາ ເຮົາບໍ່ໄດ້ຖືກລົບກວນແມ່ນແຕ່ໜ້ອຍດຽວ. ເຮົາສາມາດຈັດແຈງທຸກຄົນໃນເຮືອນຂອງເຮົາ; ເຮົາສາມາດຈັດແຈງທຸກຄົນໃນໂລກ; ເຖິງຢ່າງໃດກໍຕາມ ເຮົາບໍ່ໄດ້ຫຍຸ້ງວຽກເລີຍ, ຍ້ອນພຣະວິນຍານຂອງເຮົາກຳລັງປະຕິບັດພາລະກິດ. ພຣະວິນຍານຂອງເຮົາເຕັມໄປທົ່ວທຸກບ່ອນ, ຍ້ອນເຮົາເປັນພຣະເຈົ້າເອງທີ່ເປັນເອກະລັກ ແລະ ໂລກຈັກກະວານທັງປວງແມ່ນຢູ່ໃນມືຂອງເຮົາ. ສະນັ້ນ ຄົນໃດໜຶ່ງຈຶ່ງສາມາດເຫັນໄດ້ວ່າ ເຮົາມີລິດທານຸພາບສູງສຸດ, ເຮົາມີສະຕິປັນຍາ ແລະ ສະຫງ່າລາສີຂອງເຮົາເຕີມເຕັມທົ່ວທຸກມຸມຂອງຈັກກະວານ.

# ບົດທີ 108

ພາຍໃນຕົວເຮົາ, ທຸກຄົນສາມາດພົບການພັກຜ່ອນ ແລະ ທຸກຄົນສາມາດບັນລຸອິດສະຫຼະພາບໄດ້. ຄົນທີ່ຢູ່ນອກຕົວເຮົາແມ່ນບໍ່ສາມາດບັນລຸທັງອິດສະຫຼະພາບ ຫຼື ຄວາມສຸກໄດ້, ຍ້ອນວ່າພຣະວິນຍານຂອງເຮົາບໍ່ໄດ້ຢູ່ກັບພວກເຂົາ. ຄົນເຊັ່ນນັ້ນຖືກເອີ້ນວ່າຄົນຕາຍທີ່ໄຮ້ວິນຍານ, ໃນຂະນະທີ່ເຮົາເອີ້ນຄົນທີ່ຢູ່ພາຍໃນຕົວເຮົາວ່າ "ສິ່ງມີຊີວິດທີ່ມີວິນຍານ". ພວກເຂົາເປັນຂອງເຮົາ ແລະ ພວກເຂົາຖືກຜູກມັດໃຫ້ກັບຄືນສູ່ບັນລັງຂອງເຮົາ. ບັນດາຜູ້ທີ່ໃຫ້ບໍລິການ ແລະ ບັນດາຜູ້ທີ່ເປັນຂອງມານຮ້າຍແມ່ນຄົນຕາຍທີ່ໄຮ້ວິນຍານ ແລະ ພວກເຂົາທັງໝົດຈະຕ້ອງຖືກປະຖິ້ມ ແລະ ກາຍເປັນຄວາມວ່າງເປົ່າ. ນີ້ແມ່ນຄວາມລຶກລັບແຫ່ງແຜນການຄຸ້ມຄອງຂອງເຮົາ ແລະ ແມ່ນສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງເຮົາທີ່ມະນຸດຊາດບໍ່ສາມາດເຂົ້າໃຈໄດ້; ແນວໃດກໍຕາມ, ໃນຂະນະດຽວກັນ ເຮົາໄດ້ເຜີຍແຜ່ເລື່ອງນີ້ແກ່ທຸກຄົນ. ບັນດາຜູ້ທີ່ບໍ່ເປັນຂອງເຮົາກໍຕໍ່ຕ້ານເຮົາ; ບັນດາຜູ້ທີ່ເປັນຂອງເຮົາແມ່ນຜູ້ທີ່ເຂົ້າກັນກັບເຮົາໄດ້. ນີ້ເປັນສິ່ງທີ່ໂຕ້ແຍ້ງບໍ່ໄດ້ຢ່າງສິ້ນເຊີງ ແລະ ມັນຄືຫຼັກການທີ່ຢູ່ເບື້ອງຫຼັງການທີ່ເຮົາພິພາກສາຊາຕານ. ຫຼັກການນີ້ຄວນເປັນທີ່ຮູ້ຈັກແກ່ທຸກຄົນເພື່ອວ່າພວກເຂົາຈະສາມາດເຫັນຄວາມຊອບທຳ ແລະ ຄວາມທ່ຽງທຳຂອງເຮົາ. ທຸກຄົນທີ່ມາຈາກຊາຕານຈະຖືກພິພາກສາ, ເຜົາໄໝ້ ແລະ ເຮັດໃຫ້ກາຍເປັນຂີ້ເທົ່າ. ນີ້ແມ່ນຄວາມໂກດຮ້າຍຂອງເຮົາເຊັ່ນກັນ ແລະ ຈາກນີ້ ອຸປະນິໄສຂອງເຮົາໄດ້ຖືກເຮັດໃຫ້ຊັດເຈນຍິ່ງຂຶ້ນ. ນັບແຕ່ນີ້ໄປ, ອຸປະນິໄສຂອງເຮົາຈະຖືກປະກາດຢ່າງເປີດເຜີຍ; ມັນຈະຖືກເປີດເຜີຍຢ່າງຕໍ່ເນື່ອງແກ່ທຸກຄົນ ແລະ ທຸກຊົນຊາດ, ແກ່ທຸກສາສະໜາ, ແກ່ທຸກນິກາຍ ແລະ ແກ່ຄົນທຸກສາຂາອາຊີບ. ບໍ່ມີຫຍັງທີ່ຈະຖືກປິດບັງໄວ້; ທັງໝົດຈະຖືກເປີດເຜີຍ. ມັນເປັນຍ້ອນອຸປະນິໄສຂອງເຮົາ ແລະ ຫຼັກການທີ່ຢູ່ເບື້ອງຫຼັງການກະທຳຂອງເຮົາແມ່ນຄວາມລຶກລັບທີ່ລີ້ລັບທີ່ສຸດສຳລັບມະນຸດຊາດເຮົາຈຶ່ງຕ້ອງໄດ້ເຮັດສິ່ງນີ້ (ເພື່ອວ່າລູກຊາຍກົກຈະບໍ່ລະເມີດບົດບັນຍັດການປົກຄອງຂອງເຮົາ ແລະເພື່ອໃຊ້ອຸປະນິໄສທີ່ຖືກເປີດເຜີຍຂອງເຮົາພິພາກສາທຸກຄົນ ແລະ ທຸກຊົນຊາດອີກດ້ວຍ). ນີ້ແມ່ນແຜນການຄຸ້ມຄອງຂອງເຮົາ ແລະ ສິ່ງເຫຼົ່ານີ້ແມ່ນຂັ້ນຕອນພາລະກິດຂອງເຮົາ. ບໍ່ມີໃຜສາມາດປ່ຽນແປງມັນໄດ້ຢ່າງງ່າຍດາຍ. ເຮົາໄດ້ດຳເນີນຊີວິດຕາມອຸປະນິໄສຄວາມເປັນພຣະເຈົ້າຂອງເຮົາພາຍໃນຄວາມເປັນມະນຸດຂອງເຮົາຢ່າງສົມບູນ, ດັ່ງນັ້ນເຮົາຈຶ່ງບໍ່ອະນຸຍາດໃຫ້ໃຜມາເຮັດຜິດຕໍ່ຄວາມເປັນມະນຸດຂອງເຮົາ. (ທຸກສິ່ງທີ່ເຮົາດຳເນີນຊີວິດແມ່ນອຸປະນິໄສຄວາມເປັນພຣະເຈົ້າ; ນີ້ແມ່ນເຫດຜົນທີ່ເຮົາໄດ້ກ່າວກ່ອນໜ້ານີ້ວ່າ ເຮົາແມ່ນພຣະອົງເຈົ້າເອງ ຜູ້ທີ່ຢູ່ເໜືອກວ່າຄວາມເປັນມະນຸດທຳມະດາ). ເຮົາຈະບໍ່ຍົກໂທດໃຫ້ຜູ້ທີ່ເຮັດຜິດຕໍ່ເຮົາຢ່າງແນ່ນອນ ແລະ ເຮົາຈະປ່ອຍໃຫ້ເຂົາພິນາດໄປຊົ່ວນິລັນດອນ! ຈື່ເອົາໄວ້! ນີ້ແມ່ນສິ່ງທີ່ເຮົາໄດ້ຕັດສິນໃຈແລ້ວ; ເວົ້າອີກຢ່າງໜຶ່ງວ່າ, ນີ້ແມ່ນພາກສ່ວນທີ່ຂາດບໍ່ໄດ້ຂອງບົດບັນຍັດການປົກຄອງຂອງເຮົາ. ທຸກຄົນຄວນເຫັນສິ່ງນີ້: ຕົວຕົນທີ່ເຮົາເປັນແມ່ນພຣະເຈົ້າ ແລະຍິ່ງໄປກວ່ານັ້ນ ແມ່ນພຣະເຈົ້າເອງ. ຕອນນີ້ສິ່ງນີ້ຄວນຊັດເຈນໄດ້ແລ້ວ! ເຮົາບໍ່ໄດ້ກ່າວຫຍັງຢ່າງເລີນເລີ້. ເຮົາກ່າວ ແລະ ຊີ້ແຈງທຸກສິ່ງຢ່າງຊັດເຈນ ຈົນກວ່າພວກເຈົ້າໄດ້ຮັບຄວາມເຂົ້າໃຈທີ່ສົມບູນ.

ສະຖານະການເຄັ່ງຕຶງຫຼາຍ; ບໍ່ແມ່ນສະເພາະແຕ່ຢູ່ເຮືອນຂອງເຮົາເທົ່ານັ້ນ, ແຕ່ຍິ່ງໄປກວ່ານັ້ນແມ່ນຢູ່ນອກເຮືອນຂອງເຮົາ, ເຮົາຮຽກຮ້ອງໃຫ້ພວກເຈົ້າເປັນພະຍານໃຫ້ຊື່ຂອງເຮົາ, ດຳລົງຊີວິດຕາມເຮົາ ແລະ ເປັນພະຍານໃຫ້ເຮົາໃນທຸກດ້ານ. ຍ້ອນວ່ານີ້ແມ່ນຍຸກສຸດທ້າຍ, ຕອນນີ້ທຸກສິ່ງກຽມພ້ອມແລ້ວ ແລະ ທຸກສິ່ງທຸກຢ່າງຮັກສາຮູບລັກສະນະເດີມຂອງມັນ ແລະ ບໍ່ມີສິ່ງໃດຈະປ່ຽນແປງໄດ້ເລີຍ. ບັນດາຜູ້ທີ່ຄວນຖືກປະຖິ້ມກໍຈະຖືກໂຍນຖິ້ມໄປ ແລະ ສ່ວນບັນດາຜູ້ທີ່ຄວນຖືກຮັກສາໄວ້ກໍຈະຖືກຮັກສາໄວ້. ຢ່າພະຍາຍາມຍຶດຖື ຫຼື ຊຸກອອກຢ່າງບາກບັ່ນ; ຢ່າພະຍາຍາມທີ່ຈະຂັດຂວາງການຄຸ້ມຄອງຂອງເຮົາ ຫຼື ທຳລາຍແຜນການຂອງເຮົາ. ຈາກທັດສະນະຂອງມະນຸດ, ເຮົາຮັກ ແລະ ເຫັນອົກເຫັນໃຈມະນຸດຊາດຢູ່ສະເໝີ, ແຕ່ຈາກທັດສະນະຂອງເຮົາ, ນິໄສຂອງເຮົານັ້ນແຕກຕ່າງອອກໄປຕາມຂັ້ນຕອນພາລະກິດຂອງເຮົາ, ຍ້ອນວ່າເຮົາແມ່ນພຣະເຈົ້າທີ່ແທ້ຈິງ; ເຮົາແມ່ນພຣະເຈົ້າເອງທີ່ເປັນເອກະລັກ! ເຮົາທັງບໍ່ປ່ຽນແປງ ແລະ ປ່ຽນແປງຕະຫຼອດການ. ນີ້ແມ່ນສິ່ງທີ່ບໍ່ມີໃຜສາມາດເຂົ້າໃຈໄດ້. ເມື່ອເຮົາບອກພວກເຈົ້າກ່ຽວກັບມັນ ແລະ ອະທິບາຍມັນໃຫ້ແກ່ພວກເຈົ້າເທົ່ານັ້ນ ພວກເຈົ້າຈຶ່ງຈະມີຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບມັນ ແລະ ສາມາດຢັ່ງເຖິງມັນໄດ້. ສຳລັບລູກຊາຍຂອງເຮົາ, ເຮົາຮັກ, ເຫັນອົກເຫັນໃຈ, ຊອບທຳ ແລະ ມີລະບຽບວິໄນ ແຕ່ບໍ່ພິພາກສາ (ແລະ ສິ່ງນັ້ນ ເຮົາກໍໝາຍຄວາມວ່າ ເຮົາບໍ່ທຳລາຍລູກຊາຍກົກ). ສຳລັບຄົນທີ່ບໍ່ແມ່ນລູກຊາຍຂອງເຮົາ, ເຮົາປ່ຽນແປງທຸກເວລາ ຂຶ້ນຢູ່ກັບການຜັນປ່ຽນຂອງຍຸກສະໄໝ: ເຮົາສາມາດຮັກ, ເຫັນອົກເຫັນໃຈ, ຊອບທຳ, ສະຫງ່າງາມ, ພິພາກສາ, ໂກດຮ້າຍ, ສາບແຊ່ງ, ເຜົາໄໝ້ ແລະ ທ້າຍທີ່ສຸດແມ່ນທຳລາຍເນື້ອໜັງຂອງພວກເຂົາ. ບັນດາຜູ້ທີ່ຖືກທຳລາຍຈະພິນາດໄປພ້ອມກັບຈິດໃຈ ແລະ ວິນຍານຂອງພວກເຂົາ. ແນວໃດກໍຕາມ, ສຳລັບບັນດາຜູ້ທີ່ໃຫ້ບໍລິການ, ມີພຽງຈິດໃຈ ແລະ ດວງວິນຍານຂອງພວກເຂົາເທົ່ານັ້ນທີ່ຈະຖືກເກັບຮັກສາໄວ້ (ແລະກ່ຽວກັບຄວາມສະເພາະໃນວິທີທີ່ເຮົານຳເອົາສິ່ງນີ້ໄປປະຕິບັດ, ເຮົາຈະບອກພວກເຈົ້າພາຍຫຼັງ, ເພື່ອວ່າພວກເຈົ້າຈະສາມາດເຂົ້າໃຈໄດ້). ແນວໃດກໍຕາມ, ພວກເຂົາຈະບໍ່ມີອິດສະຫຼະພາບຈັກເທື່ອ ແລະ ຈະບໍ່ຖືກປົດປ່ອຍຈັກເທື່ອ, ຍ້ອນວ່າພວກເຂົາຢູ່ໃຕ້ຄົນຂອງເຮົາ ແລະ ຢູ່ພາຍໃຕ້ການຄວບຄຸມຂອງຄົນຂອງເຮົາ. ເຫດຜົນທີ່ເຮົາກຽດຊັງຜູ້ໃຫ້ບໍລິການຫຼາຍກໍຍ້ອນວ່າ ພວກເຂົາທັງໝົດແມ່ນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ບັນດາຜູ້ທີ່ບໍ່ແມ່ນຜູ້ໃຫ້ບໍລິການກໍແມ່ນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ເຊັ່ນກັນ. ເວົ້າອີກຢ່າງໜຶ່ງວ່າ, ທຸກຄົນທີ່ບໍ່ແມ່ນລູກຊາຍກົກແມ່ນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່. ເມື່ອເຮົາກ່າວວ່າບັນດາຜູ້ທີ່ຢູ່ໃນນະຣົກຖວາຍການສັນລະເສີນນິລັນດອນໃຫ້ແກ່ເຮົາ, ເຮົາໝາຍຄວາມວ່າພວກເຂົາຈະໃຫ້ການບໍລິການແກ່ເຮົາຕະຫຼອດໄປ. ສິ່ງນີ້ໄດ້ຖືກກຳນົດໄວ້ເທິງກ້ອນຫີນ. ຄົນເຫຼົ່ານັ້ນຈະເປັນທາດ, ງົວຄວາຍ ແລະ ມ້າຢູ່ສະເໝີ. ເຮົາສາມາດຂ້າພວກເຂົາໄດ້ທຸກເວລາ ແລະເຮົາກໍສາມາດປົກຄອງພວກເຂົາຕາມທີ່ເຮົາປາຖະໜາ, ຍ້ອນວ່າພວກເຂົາແມ່ນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ບໍ່ມີອຸປະນິໄສຂອງເຮົາ. ອີກຢ່າງແມ່ນຍ້ອນວ່າພວກເຂົາເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່, ພວກເຂົາຈຶ່ງມີນິໄສຂອງມັນ; ນັ້ນກໍຄືວ່າ ພວກເຂົາມີອຸປະນິໄສຂອງສັດ. ນີ້ແມ່ນຈິງແທ້ແນ່ນອນ ແລະ ບໍ່ປ່ຽນແປງຕະຫຼອດໄປ! ນີ້ກໍຍ້ອນວ່າມັນທັງໝົດໄດ້ຖືກກຳນົດໄວ້

ລ່ວງໜ້າໂດຍເຮົາ. ບໍ່ມີໃຜສາມາດປ່ຽນແປງມັນໄດ້ (ເຮົາໝາຍຄວາມວ່າ ເຮົາຈະບໍ່ອະນຸຍາດໃຫ້ຜູ້ໃດເຮັດຜິດກົດລະບຽບນີ້); ຖ້າເຈົ້າລອງ, ເຮົາຈະລົງມືກັບເຈົ້າເສຍ!

ພວກເຈົ້າຄວນຫຼຽວເບິ່ງຄວາມລຶກລັບທີ່ເຮົາໄດ້ເປີດເຜີຍໃຫ້ເພື່ອເບິ່ງວ່າແຜນການຄຸ້ມຄອງຂອງເຮົາ ແລະ ພາລະກິດຂອງເຮົາບັນລຸຮອດຂັ້ນໃດແລ້ວ. ໃຫ້ເບິ່ງສິ່ງທີ່ເຮົາກະທຳດ້ວຍມືຂອງເຮົາເອງ ແລະ ເບິ່ງວ່າການພິພາກສາຂອງເຮົາ ແລະ ຄວາມໂກດຮ້າຍຂອງເຮົາຕົກໃສ່ຄົນແບບໃດ. ນີ້ແມ່ນຄວາມຊອບທຳຂອງເຮົາ. ເຮົາວາງພາລະກິດຂອງເຮົາອອກ ແລະ ເຮົາຄຸ້ມຄອງພາລະກິດຂອງເຮົາຕາມຄວາມລຶກລັບທີ່ເຮົາໄດ້ເປີດເຜີຍ. ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້; ມັນຕ້ອງຖືກປະຕິບັດສຳເລັດເທື່ອລະບາດກ້າວຕາມຄວາມປາຖະໜາຂອງເຮົາ. ຄວາມລຶກລັບແມ່ນເສັ້ນທາງເຊິ່ງພາລະກິດຂອງເຮົາດຳເນີນໄປ ແລະ ພວກມັນແມ່ນສັນຍານທີ່ບົ່ງບອກເຖິງຂັ້ນຕອນຕ່າງໆໃນແຜນການຄຸ້ມຄອງຂອງເຮົາ. ບໍ່ມີໃຜຈະຕື່ມ ຫຼື ລຶບສິ່ງໃດອອກຈາກຄວາມລຶກລັບຂອງເຮົາໄດ້, ຍ້ອນວ່າຖ້າຄວາມລຶກລັບຜິດພາດ, ແລ້ວເສັ້ນທາງກໍຜິດພາດເຊັ່ນກັນ. ເປັນຫຍັງເຮົາຈິ່ງເປີດເຜີຍຄວາມລຶກລັບຂອງເຮົາກັບພວກເຈົ້າ? ແມ່ນຫຍັງຄືເຫດຜົນ? ມີໃຜໃນທ່າມກາງພວກເຈົ້າທີ່ສາມາດເວົ້າໄດ້ຢ່າງຊັດເຈນບໍ? ນອກຈາກນັ້ນ, ເຮົາໄດ້ເວົ້າວ່າຄວາມລຶກລັບແມ່ນເສັ້ນທາງ, ດັ່ງນັ້ນ ເສັ້ນທາງນີ້ໝາຍເຖິງຫຍັງ? ມັນແມ່ນຂະບວນການທີ່ພວກເຈົ້າຜ່ານເຂົ້າໄປຈາກເນື້ອໜັງສູ່ຮ່າງກາຍ ແລະ ນີ້ແມ່ນຂັ້ນຕອນໜຶ່ງທີ່ສຳຄັນ. ຫຼັງຈາກທີ່ເຮົາເປີດເຜີຍຄວາມລຶກລັບຂອງເຮົາ, ແນວຄວາມຄິດຂອງຄົນກໍຈະຄ່ອຍໆຖືກຖອນອອກ ແລະ ຄວາມຄິດຂອງພວກເຂົາກໍຄ່ອຍໆອ່ອນລົງ. ນີ້ແມ່ນຂະບວນການເຂົ້າສູ່ອານາຈັກຝ່າຍວິນຍານ. ສະນັ້ນ, ເຮົາຈິ່ງເວົ້າວ່າພາລະກິດຂອງເຮົາເກີດຂຶ້ນເປັນຂັ້ນຕອນ ແລະ ມັນບໍ່ໄດ້ເລື່ອນລອຍ; ນີ້ແມ່ນຄວາມເປັນຈິງ ແລະ ນີ້ແມ່ນວິທີການປະຕິບັດພາລະກິດຂອງເຮົາ. ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້ ຫຼື ບໍ່ມີໃຜສາມາດບັນລຸມັນໄດ້, ຍ້ອນວ່າເຮົາແມ່ນພຣະເຈົ້າທີ່ເປັນເອກະລັກເອງ! ພາລະກິດຂອງເຮົາສຳເລັດລົງໂດຍເຮົາເປັນການສ່ວນຕົວ. ໂລກຈັກກະວານທັງໝົດແມ່ນຖືກຄວບຄຸມໂດຍເຮົາຜູ້ດຽວ ແລະ ຖືກຈັດແຈງໂດຍເຮົາຜູ້ດຽວ. ໃຜກ້າທີ່ຈະບໍ່ຟັງຄວາມເຮົາ? (ໂດຍ "ເຮົາຜູ້ດຽວ", ເຮົາໝາຍເຖິງພຣະເຈົ້າເອງ, ຍ້ອນວ່າຕົວຕົນທີ່ເຮົາເປັນແມ່ນພຣະເຈົ້າເອງ, ດັ່ງນັ້ນ ຢ່າຍຶດໝັ້ນກັບແນວຄວາມຄິດຂອງຕົວເຈົ້າເອງຢ່າງໜັກແໜ້ນຫຼາຍ). ໃຜກ້າຕໍ່ຕ້ານເຮົາ? ພວກເຂົາຈະຖືກລົງໂທດຢ່າງຮຸນແຮງ! ພວກເຈົ້າໄດ້ເຫັນຜົນຮັບຂອງມັງກອນແດງຜູ້ຍິ່ງໃຫຍ່ແລ້ວ! ນັ້ນແມ່ນຈຸດຈົບຂອງມັນ, ແຕ່ມັນຍັງແມ່ນສິ່ງທີ່ບໍ່ສາມາດຫຼີກລ້ຽງໄດ້ອີກດ້ວຍ. ພາລະກິດຕ້ອງຖືກປະຕິບັດໂດຍຕົວເຮົາເອງ ເພື່ອວ່າມັງກອນແດງຜູ້ຍິ່ງໃຫຍ່ຈະໄດ້ຮັບຄວາມອັບອາຍ. ມັນບໍ່ສາມາດລຸກຂຶ້ນໄດ້ອີກ ແລະ ມັນຈະຖືກທຳລາຍໄປຕະຫຼອດການ! ຕອນນີ້ ເຮົາເລີ່ມເປີດເຜີຍຄວາມລຶກລັບຕ່າງໆ. (ຈື່ເອົາ! ຄວາມລຶກລັບສ່ວນໃຫຍ່ທີ່ຖືກເປີດເຜີຍແມ່ນສິ່ງທີພວກເຈົ້າມັກເວົ້າ ແຕ່ບໍ່ມີໃຜເຂົ້າໃຈ). ເຮົາໄດ້ເວົ້າວ່າທຸກສິ່ງທີ່ຄົນເຫັນວ່າບໍ່ສຳເລັດແມ່ນໄດ້ຖືກເຮັດໃຫ້ສົມບູນແບບແລ້ວໃນສາຍຕາຂອງເຮົາ ແລະ ສຳລັບບາງຄົນແລ້ວ ສິ່ງທີ່ເຮົາເຫັນເປັນພຽງການເລີ່ມຕົ້ນນັ້ນກໍເບິ່ງຄືວ່າສຳເລັດແລ້ວ. ສິ່ງນີ້ມີຄວາມຂັດແຍ້ງກັນບໍ? ມັນບໍ່ໄດ້ຂັດແຍ້ງ. ຄົນຄິດແບບນັ້ນ ຍ້ອນພວກເຂົາມີແນວຄວາມຄິດ ແລະ ຄວາມຄິດຂອງພວກເຂົາເອງ. ສິ່ງທີ່ເຮົາວາງແຜນໄວ້ໄດ້

ສຳເລັດລົງຜ່ານພຣະທຳຂອງເຮົາ (ພວກມັນຖືກກຳນົດໄວ້ເມື່ອເຮົາກ່າວເຊັ່ນນັ້ນ ແລະ ພວກມັນສຳເລັດໄປເມື່ອເຮົາກ່າວເຊັ່ນນັ້ນ). ແນວໃດກໍຕາມ, ສຳລັບເຮົາແລ້ວ ມັນບໍ່ໄດ້ເບິ່ງຄືວ່າສິ່ງທີ່ເຮົາກ່າວນັ້ນໄດ້ສຳເລັດ. ນີ້ກໍຍ້ອນວ່າມີເວລາຈຳກັດໃນສິ່ງທີ່ເຮົາເຮັດ. ສະນັ້ນ ເຮົາຈຶ່ງເຫັນສິ່ງເຫຼົ່ານີ້ວ່າບໍ່ສຳເລັດ, ເຖິງແມ່ນວ່າໃນສາຍຕາທາງເນື້ອໜັງຂອງຄົນ (ຍ້ອນຄວາມແຕກຕ່າງກ່ຽວກັບແນວຄວາມຄິດດ້ານເວລາຂອງພວກເຂົາ), ສິ່ງເຫຼົ່ານີ້ໄດ້ສຳເລັດລົງແລ້ວ. ທຸກມື້ນີ້ ຄົນສ່ວນໃຫຍ່ສົງໄສເຮົາ ຍ້ອນຄວາມລຶກລັບທີ່ເຮົາເປີດເຜີຍ. ເນື່ອງຈາກການເລີ່ມຕົ້ນຂອງຄວາມຈິງ ແລະ ຍ້ອນເຈດຕະນາຂອງເຮົາບໍ່ກົງກັນກັບແນວຄວາມຄິດຂອງຄົນ, ພວກເຈົ້າຈຶ່ງຕໍ່ຕ້ານເຮົາ ແລະ ປະຕິເສດເຮົາ. ນີ້ແມ່ນການທີ່ຊາຕານຕິດກັບດັກຕົນເອງໃນກົນອຸບາຍຂອງມັນເອງ. (ພວກເຂົາຕ້ອງການຮັບພອນ, ແຕ່ພວກເຂົາບໍ່ໄດ້ຄາດຫວັງວ່າພຣະເຈົ້າຈະບໍ່ໄດ້ເຫັນດ້ວຍກັບແນວຄວາມຄິດຂອງມະນຸດໃນລະດັບດັ່ງກ່າວ, ດັ່ງນັ້ນ ພວກເຂົາຈຶ່ງຖອຍ). ນີ້ແມ່ນຜົນສະທ້ອນຂອງພາລະກິດຂອງເຮົາເຊັ່ນກັນ. ທຸກຄົນຄວນສັນລະເສີນເຮົາ, ເຊີດຊູເຮົາ ແລະ ມອບສະຫງ່າລາສີໃຫ້ແກ່ເຮົາ. ແນ່ນອນວ່າທຸກສິ່ງຢູ່ໃນມືຂອງເຮົາ ແລະ ແນ່ນອນວ່າທຸກສິ່ງຢູ່ພາຍໃນການພິພາກສາຂອງເຮົາ. ເມື່ອທຸກຄົນຫຼັ່ງໄຫຼມາຫາສູ່ພູຂອງເຮົາ ແລະ ເມື່ອລູກຊາຍກົກກັບຄືນມາຢ່າງມີໄຊຊະນະ ນັ້ນກໍຈະເປັນຈຸດສິ້ນສຸດສຳລັບແຜນການຄຸ້ມຄອງຂອງເຮົາ. ມັນຈະເປັນຊ່ວງເວລາແຫ່ງຄວາມສຳເລັດສຳລັບແຜນການຄຸ້ມຄອງຫົກພັນປີຂອງເຮົາ. ທຸກສິ່ງຖືກຈັດແຈງໄວ້ໂດຍເຮົາເປັນການສ່ວນຕົວ; ເຮົາໄດ້ເວົ້າເລື່ອງນີ້ມາຫຼາຍເທື່ອແລ້ວ. ເນື່ອງຈາກວ່າພວກເຈົ້າຍັງດຳລົງຊີວິດຢູ່ພາຍໃນແນວຄວາມຄິດຂອງພວກເຈົ້າ, ເຮົາຕ້ອງໄດ້ເນັ້ນເລື່ອງນີ້ຊ້ຳໆ ເພື່ອວ່າພວກເຈົ້າຈະບໍ່ເຮັດຜິດໃນທີ່ນີ້ເຊິ່ງຈະຂັດຂວາງແຜນການຂອງເຮົາ. ຄົນບໍ່ສາມາດຊ່ວຍເຮົາ ຫຼື ພວກເຂົາບໍ່ສາມາດມີສ່ວນຮ່ວມໃນການຄຸ້ມຄອງຂອງເຮົາໄດ້, ຍ້ອນວ່າໃນປັດຈຸບັນ ພວກເຈົ້າຍັງຄົງເປັນຂອງເນື້ອໜັງ ແລະ ເລືອດຢູ່ (ເຖິງແມ່ນວ່າພວກເຈົ້າເປັນຂອງເຮົາ, ພວກເຈົ້າກໍຍັງດຳລົງຊີວິດຢູ່ໃນເນື້ອໜັງຢູ່). ເມື່ອເປັນດັ່ງນັ້ນ ເຮົາຈຶ່ງເວົ້າວ່າຄົນທີ່ເປັນຂອງເນື້ອໜັງ ແລະ ເລືອດບໍ່ສາມາດໄດ້ຮັບມໍລະດົກຂອງເຮົາໄດ້. ນີ້ກໍແມ່ນເຫດຜົນຫຼັກທີ່ເຮັດໃຫ້ພວກເຈົ້າເຂົ້າສູ່ອານາຈັກຝ່າຍວິນຍານເຊັ່ນກັນ.

ຢູ່ໃນໂລກ, ແຜ່ນດິນໄຫວແມ່ນການເລີ່ມຕົ້ນຂອງໄພພິບັດ. ກ່ອນອື່ນ, ເຮົາໄດ້ສ້າງໂລກ, ແຜ່ນດິນໂລກ, ນັ້ນແມ່ນການປ່ຽນແປງ ແລະ ຫຼັງຈາກນັ້ນໂລກລະບາດ ແລະ ຄວາມອຶດຢາກກໍມາເຖິງ. ນີ້ແມ່ນແຜນການຂອງເຮົາ ແລະ ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຂອງເຮົາ ແລະ ເຮົາຈະເຮັດໃຫ້ທຸກສິ່ງຮັບໃຊ້ເຮົາເພື່ອເຮັດໃຫ້ແຜນການຄຸ້ມຄອງຂອງເຮົາສຳເລັດໄປ. ສະນັ້ນ, ໂລກຈັກກະວານທັງໝົດຈະຖືກທຳລາຍ ເຖິງແມ່ນວ່າຈະປາສະຈາກການແຊກແຊງໂດຍກົງຂອງເຮົາ. ເມື່ອເຮົາກາຍເປັນເນື້ອໜັງໃນຄັ້ງທຳອິດ ແລະ ຖືກຄຶງໃສ່ໄມ້ກາງແຂນ, ແຜ່ນດິນໂລກສັ່ນສະເທືອນຢ່າງແຮງ, ມັນຈະເປັນແບບດຽວກັນເມື່ອວາລະສຸດທ້າຍມາເຖິງ. ແຜ່ນດິນໄຫວຈະເລີ່ມຕົ້ນຂຶ້ນທັນທີເມື່ອເຮົາເຂົ້າສູ່ອານາຈັກຝ່າຍວິນຍານຈາກເນື້ອໜັງ. ສະນັ້ນ, ລູກຊາຍກົກຈະບໍ່ທົນທຸກຈາກໄພພິບັດຢ່າງແນ່ນອນ, ໃນຂະນະທີ່ບັນດາຜູ້ທີ່ບໍ່ແມ່ນລູກຊາຍກົກຈະຖືກປະໄວ້ໃຫ້ທົນທຸກຢູ່ທ່າມກາງໄພພິບັດ. ເພາະສະນັ້ນ, ຈາກທັດສະນະຂອງມະນຸດ, ທຸກຄົນເຕັມໃຈທີ່ຈະເປັນລູກຊາຍກົກ. ໃນຄວາມສັງຫອນໃຈຂອງຜູ້ຄົນ, ນີ້ບໍ່ແມ່ນ

ສໍາລັບການຊື່ນຊົມພອນ, ແຕ່ເພື່ອໃຫ້ພົ້ນຈາກຄວາມທຸກທໍລະມານຈາກໄພພິບັດ. ນີ້ແມ່ນກົນອຸບາຍຂອງມັງກອນແດງຜູ້ຍິ່ງໃຫຍ່. ແນວໃດກໍຕາມ, ເຮົາຈະບໍ່ປ່ອຍໃຫ້ມັນໜີໄປ; ເຮົາຈະເຮັດໃຫ້ມັນທົນທຸກທໍລະມານຈາກການລົງໂທດຢ່າງຮຸນແຮງຂອງເຮົາ ແລະ ຫຼັງຈາກນັ້ນກໍລຸກຂຶ້ນ ແລະ ໃຫ້ບໍລິການແກ່ເຮົາ (ນີ້ໝາຍເຖິງການເຮັດໃຫ້ລູກຊາຍຂອງເຮົາ ແລະ ຄົນຂອງເຮົາສົມບູນແບບ), ເຮັດໃຫ້ມັນຖືກຫຼອກລວງໂດຍກົນອຸບາຍຂອງມັນເອງຕະຫຼອດໄປ, ຮັບການພິພາກສາຂອງເຮົາຕະຫຼອດໄປ ແລະ ຖືກເຮົາເຜົາໄໝ້ຕະຫຼອດໄປ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງການເຮັດໃຫ້ຜູ້ໃຫ້ບໍລິການສັນລະເສີນເຮົາ (ນັ້ນກໍຄື ການໃຊ້ພວກເຂົາເພື່ອເປີດເຜີຍພະລັງອັນຍິ່ງໃຫຍ່ຂອງເຮົາ). ເຮົາຈະບໍ່ອະນຸຍາດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ລັກເຂົ້າອານາຈັກຂອງເຮົາ ຫຼື ເຮົາຈະບໍ່ໃຫ້ສິດມັນເພື່ອສັນລະເສີນເຮົາ! (ຍ້ອນວ່າມັນບໍ່ຄູ່ຄວນ; ມັນຈະບໍ່ມີວັນຄູ່ຄວນ!) ເຮົາມີແຕ່ຈະເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ໃຫ້ການບໍລິການແກ່ເຮົາຕະຫຼອດໄປ! ເຮົາພຽງແຕ່ຈະປ່ອຍໃຫ້ມັນກົ້ມຂາບລົງຕໍ່ໜ້າເຮົາເທົ່ານັ້ນ. (ບັນດາຜູ້ທີ່ຖືກທໍາລາຍຍັງດີກວ່າບັນດາຜູ້ທີ່ຢູ່ໃນນະຮົກ; ການທໍາລາຍເປັນພຽງຮູບແບບຊົ່ວຄາວຂອງການລົງໂທດທີ່ຮຸນແຮງ, ໃນຂະນະທີ່ຄົນທີ່ຢູ່ໃນນະຮົກຈະທົນທຸກກັບການລົງໂທດທີ່ຮຸນແຮງຕະຫຼອດການ. ຍ້ອນເຫດຜົນນີ້, ເຮົາຈຶ່ງໃຊ້ຄໍາວ່າ "ກົ້ມຂາບ". ຍ້ອນວ່າຄົນເຫຼົ່ານີ້ລັກເຂົ້າອານາຈັກຂອງເຮົາ ແລະ ຊື່ນຊົມພຣະຄຸນຂອງເຮົາຫຼາຍ, ມີຄວາມຮູ້ບາງຢ່າງກ່ຽວກັບເຮົາ, ເຮົາໃຊ້ການລົງໂທດທີ່ຮຸນແຮງ. ສ່ວນບັນດາຜູ້ທີ່ຢູ່ນອກເຮືອນຂອງເຮົາ, ພວກເຈົ້າສາມາດເວົ້າໄດ້ວ່າ ຄົນທີ່ບໍ່ມີຄວາມຮູ້ຈະບໍ່ທົນທຸກ). ໃນແນວຄວາມຄິດຂອງຜູ້ຄົນ, ພວກເຂົາຄິດວ່າ ການທີ່ຜູ້ຄົນທີ່ຖືກທໍາລາຍນັ້ນຮ້າຍແຮງກວ່າບັນດາຜູ້ທີ່ຢູ່ໃນນະຮົກ, ແຕ່ກົງກັນຂ້າມ, ຄົນທີ່ຢູ່ໃນນະຮົກຕ້ອງຖືກລົງໂທດຢ່າງໜັກຕະຫຼອດການ ແລະ ຜູ້ທີ່ຖືກທໍາລາຍຈະກັບຄືນສູ່ຄວາມວ່າງເປົ່າຊົ່ວນິລັນດອນ.

# ບົດທີ 109

ໃນແຕ່ລະມື້ ເຮົາໄດ້ກ່າວພຣະຄຳ, ເວົ້າ ແລະ ເປີດເຜີຍສັນຍານ ແລະ ສິ່ງອັດສະຈັນອັນຍິ່ງໃຫຍ່ຂອງເຮົາ. ທຸກສິ່ງເຫຼົ່ານີ້ປະກອບເປັນພາລະກິດຂອງພຣະວິນຍານຂອງເຮົາ. ໃນສາຍຕາຂອງຜູ້ຄົນ, ເຮົາເປັນພຽງມະນຸດຄົນໜຶ່ງ, ແຕ່ມັນຢູ່ໃນມະນຸດນີ້ແທ້ໆທີ່ເຮົາເປີດເຜີຍທັງໝົດຂອງເຮົາ ພ້ອມທັງອຳນາດອັນຍິ່ງໃຫຍ່ຂອງເຮົາ.

ຍ້ອນຜູ້ຄົນເມີນເສີຍມະນຸດທີ່ເຮົາເປັນ ແລະ ເບິ່ງຂ້າມການກະທຳຂອງເຮົາ, ພວກເຂົາກໍສັນນິຖານວ່າ ສິ່ງເຫຼົ່ານີ້ແມ່ນສິ່ງທີ່ມະນຸດໄດ້ເຮັດ. ແລ້ວເປັນຫຍັງເຈົ້າຈຶ່ງບໍ່ຢຸດທີ່ຈະສົງໄສວ່າ ມະນຸດຈະສາມາດສຳເລັດສິ່ງທີ່ເຮົາສຳເລັດໄດ້ ຫຼື ບໍ່? ຜູ້ຄົນບໍ່ຮູ້ຈັກເຮົາຈົນເຖິງຂອບເຂດນີ້; ພວກເຂົາບໍ່ເຂົ້າໃຈພຣະທຳຂອງເຮົາ ຫຼື ພວກເຂົາບໍ່ຢັ່ງເຖິງການກະທຳຂອງເຮົາ. ມະນຸດທີ່ຊົ່ວຮ້າຍ ແລະ ເສື່ອມຊາມເອີຍ! ເມື່ອໃດເຮົາຈຶ່ງຈະກືນກິນເຈົ້າ? ເມື່ອໃດເຮົາຈຶ່ງຈະຝັງເຈົ້າໃນທະເລສາບແຫ່ງໄຟ ແລະ ມາດ? ມີຫຼາຍຄັ້ງທີ່ເຮົາຖືກຂັບໄລ່ຈາກກຸ່ມຂອງພວກເຈົ້າ, ມີຫຼາຍຄັ້ງທີ່ຜູ້ຄົນດູຖູກ, ເຍາະເຍີ້ຍ ແລະ ເຮັດໃຫ້ເຮົາເສື່ອມເສຍຊື່ສຽງ ແລະ ມີຫຼາຍຄັ້ງທີ່ຜູ້ຄົນພິພາກສາ ແລະ ທ້າທາຍເຮົາຢ່າງເປີດເຜີຍ. ມະນຸດທີ່ຕາບອດເອີຍ! ເຈົ້າບໍ່ຮູ້ບໍວ່າ ພວກເຈົ້າເປັນພຽງຂີ້ຕົມກຳໜຶ່ງທີ່ຢູ່ໃນຝາມືຂອງເຮົາ? ເຈົ້າບໍ່ຮູ້ບໍວ່າ ພວກເຈົ້າເປັນພຽງເປົ້າໝາຍຂອງການສ້າງຂອງເຮົາ? ຄວາມໂກດຮ້າຍຂອງເຮົາຖືກປົດປ່ອຍໃນຕອນນີ້ ແລະ ບໍ່ມີຜູ້ໃດສາມາດປ້ອງກັນມັນໄດ້. ຜູ້ຄົນພຽງແຕ່ສາມາດຂໍຄວາມເມດຕາຊໍ້າໄປຊໍ້າມາ. ເຖິງຢ່າງໃດກໍຕາມ ໃນຂະນະທີ່ພາລະກິດຂອງເຮົາກ້າວໜ້າມາຈົນເຖິງລະດັບນີ້ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ຄົນທີ່ຖືກສ້າງຕ້ອງກັບຄືນສູ່ຂີ້ຕົມ. ມັນບໍ່ແມ່ນວ່າເຮົາບໍ່ຊອບທຳ, ແຕ່ພວກເຈົ້າເສື່ອມຊາມຫຼາຍເກີນໄປ ແລະ ປະພຶດຕົນໂດຍບໍ່ຢັບຢັ້ງຊັ່ງໃຈ ແລະ ມັນເປັນຍ້ອນພວກເຈົ້າຖືກຄອບງຳໂດຍຊາຕານ ແລະ ກາຍມາເປັນເຄື່ອງມືຂອງມັນ. ເຮົາເປັນພຣະເຈົ້າເອງທີ່ບໍລິສຸດ; ເຮົາບໍ່ສາມາດໄດ້ຮັບມົນທິນ ຫຼື ເຮົາບໍ່ສາມາດມີວິຫານທີ່ບໍ່ສະອາດ. ນັບແຕ່ນີ້ເປັນຕົ້ນໄປ, ຄວາມໃຈຮ້າຍທີ່ລຸກໄໝ້ຂອງເຮົາ (ຮຸນແຮງຫຼາຍກວ່າຄວາມໂກດຮ້າຍ) ຈະເລີ່ມຕົ້ນຖອກເທລົງມາສູ່ທຸກຊົນຊາດ ແລະ ຜູ້ຄົນ ແລະ ຂ້ຽນຕີຄົນຕໍ່າຊ້າທຸກຄົນທີ່ມາຈາກເຮົາ ແຕ່ບໍ່ຮູ້ຈັກເຮົາ. ເຮົາກຽດຊັງມະນຸດຈົນເຖິງທີ່ສຸດ ແລະ ເຮົາຈະບໍ່ມີຄວາມເມດຕາອີກຕໍ່ໄປ; ກົງກັນຂ້າມ ເຮົາຈະຖອກເທຄຳສາບແຊ່ງທັງໝົດຂອງເຮົາລົງມາ. ຈະບໍ່ມີຄວາມເຫັນອົກເຫັນໃຈ ແລະ ຄວາມຮັກອີກຕໍ່ໄປແທ້ໆ, ທຸກສິ່ງຈະຖືກເຜົາໄໝ້ໃຫ້ກາຍເປັນຄວາມວ່າງເປົ່າ ແລະ ມີພຽງແຕ່ອານາຈັກຂອງເຮົາເທົ່ານັ້ນທີ່ຈະຄົງຢູ່ ເພື່ອວ່າປະຊາຊົນຂອງເຮົາຈະສັນລະເສີນເຮົາໃນເຮືອນຂອງເຮົາ, ມອບສະຫງ່າລາສີໃຫ້ແກ່ເຮົາ ແລະ ຮ້ອງໂຮໃຫ້ແກ່ເຮົາຕະຫຼອດໄປ (ນີ້ແມ່ນໜ້າທີ່ຂອງປະຊາຊົນຂອງເຮົາ). ມືຂອງເຮົາຈະເລີ່ມຕົ້ນຂ້ຽນຕີຄົນທີ່ຢູ່ທັງພາຍໃນ ແລະ ພາຍນອກເຮືອນຂອງເຮົາຢ່າງເປັນທາງການ. ບໍ່ມີຄົນເຮັດຊົ່ວຄົນໃດສາມາດຫຼົບໜີຈາກອົ້ງມື ແລະ ການພິພາກສາຂອງເຮົາໄດ້; ທຸກຄົນຕ້ອງໄດ້ຜ່ານຄວາມລຳບາກທໍລະມານນີ້ ແລະ ນະມັດສະການເຮົາ. ນີ້ແມ່ນຄວາມສະຫງ່າຜ່າເຜີຍຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ມັນຄືບົດບັນຍັດການປົກຄອງທີ່ເຮົາປະກາດຕໍ່ຜູ້ເຮັດຊົ່ວ. ບໍ່ມີ

ຜູ້ໃດສາມາດຊ່ວຍຄົນໃດຄົນໜຶ່ງໄດ້. ຜູ້ຄົນພຽງແຕ່ສາມາດເບິ່ງແຍງຕົນເອງ, ແຕ່ບໍ່ວ່າພວກເຂົາຈະເຮັດຫຍັງກໍຕາມ ພວກເຂົາຈະບໍ່ສາມາດຫຼົບໜີຈາກມືແຫ່ງການຂ້ຽນຕີຂອງເຮົາ. ໃນທີ່ນີ້ແມ່ນໄດ້ເປີດເຜີຍເຖິງເຫດຜົນທີ່ມັນມີການເວົ້າວ່າ ບົດບັນຍັດການປົກຄອງຂອງເຮົາຮຸນແຮງ; ນີ້ແມ່ນຂໍ້ແທ້ຈິງທີ່ທຸກຄົນສາມາດເຫັນໄດ້ດ້ວຍຕາຂອງພວກເຂົາເອງ.

ເມື່ອເຮົາເລີ່ມໃຈຮ້າຍ, ມານຮ້າຍທັງໝົດ ທັງໃຫຍ່ ແລະ ນ້ອຍກໍຈະໜີໄປຢ່າງໂກລະຫົນ ໂດຍຢ້ານຢ່າງສຸດຊຶ້ງວ່າ ມືຂອງເຮົາຈະໂຈມຕີພວກມັນຈົນຕາຍ, ແຕ່ບໍ່ມີຜູ້ໃດສາມາດຫຼົບໜີມືຂອງເຮົາໄດ້. ເຮົາຖືອຸປະກອນແຫ່ງການລົງໂທດທັງໝົດຢູ່ໃນມືຂອງເຮົາ; ມືຂອງເຮົາຄວບຄຸມທຸກສິ່ງ, ທຸກຢ່າງຢູ່ພາຍໃນອຸ້ງມືຂອງເຮົາ ແລະ ບໍ່ມີຜູ້ໃດສາມາດຫຼຸດພົ້ນໄດ້. ນີ້ແມ່ນສະຕິປັນຍາຂອງເຮົາ. ເມື່ອເຮົາມາສູ່ໂລກມະນຸດ, ເຮົາກໍໄດ້ສຳເລັດ ພາລະກິດກຽມການ ທຸກລັກສະນະໂດຍວາງພື້ນຖານເພື່ອເລີ່ມຕົ້ນພາລະກິດຂອງເຮົາໃນທ່າມກາງມະນຸດ (ນີ້ກໍຍ້ອນວ່າເຮົາເປັນພຣະເຈົ້າທີ່ມີສະຕິປັນຍາ ແລະ ເຮົາຈັດການກັບສິ່ງທີ່ຄວນເກີດຂຶ້ນ ແລະ ສິ່ງທີ່ບໍ່ຄວນເກີດຂຶ້ນຢ່າງເໝາະສົມ). ຫຼັງຈາກທີ່ທຸກຄົນຖືກຈັດແຈງຢ່າງເໝາະສົມ, ເຮົາກໍກາຍມາເປັນເນື້ອໜັງ ແລະ ມາສູ່ໂລກມະນຸດ. ເຖິງຢ່າງໃດກໍຕາມບໍ່ມີຜູ້ໃດຮັບຮູ້ເຮົາໄດ້. ນອກຈາກຄົນທີ່ເຮົາໄດ້ສ່ອງແສງສະຫວ່າງແລ້ວ, ລູກຊາຍແຫ່ງຄວາມກະບົດທັງໝົດໄດ້ທ້າທາຍເຮົາ, ເຮັດໃຫ້ເຮົາອັບອາຍ ແລະ ສະແດງອາການເມີນເສີຍຕໍ່ເຮົາ. ເຖິງແມ່ນວ່າໃນທີ່ສຸດແລ້ວ ເຮົາຈະເຮັດໃຫ້ພວກເຂົາປະພຶດຕົນຢ່າງດີ ແລະ ອ່ອນນ້ອມຖ່ອມຕົນ. ເຖິງແມ່ນວ່າສຳລັບມະນຸດແລ້ວ ມັນອາດເບິ່ງຄືກັບວ່າເຮົາບໍ່ໄດ້ເຮັດຫຍັງຫຼາຍ ພາລະກິດອັນຍິ່ງໃຫຍ່ຂອງເຮົາກໍໄດ້ສຳເລັດລົງແລ້ວ. (ຜູ້ຄົນລ້ວນແລ້ວແຕ່ເຊື່ອຟັງມະນຸດທີ່ເຮົາເປັນຢ່າງສົມບູນ ທັງດ້ວຍຄຳເວົ້າ ແລະດ້ວຍໃຈ; ນີ້ແມ່ນສັນຍານ). ມື້ນີ້ ເຮົາລຸກຂຶ້ນ ແລະ ຂ້ຽນຕີວິນຍານຊົ່ວຮ້າຍທຸກຮູບແບບທີ່ທ້າທາຍເຮົາ. ບໍ່ວ່າພວກເຂົາໄດ້ຕິດຕາມເຮົາດົນສໍ່າໃດກໍຕາມ, ພວກເຂົາກໍຕ້ອງອອກຈາກຂ້າງກາຍຂອງເຮົາໄປ. ເຮົາບໍ່ຕ້ອງການຜູ້ໃດກໍຕາມທີ່ຕໍ່ຕ້ານເຮົາ (ພວກເຂົາເປັນຄົນທີ່ຂາດຄວາມເຂົ້າໃຈຝ່າຍວິນຍານ, ຄົນທີ່ຖືກຄອບງຳໂດຍວິນຍານຊົ່ວຮ້າຍເປັນການຊົ່ວຄາວ ແລະ ຄົນທີ່ບໍ່ຮູ້ຈັກເຮົາ). ເຮົາບໍ່ຕ້ອງການພວກເຂົາແມ່ນແຕ່ຄົນດຽວ! ທຸກຄົນຈະຖືກກຳຈັດ ແລະ ກາຍມາເປັນລູກຊາຍແຫ່ງຄວາມຫາຍະນະ! ຫຼັງຈາກທີ່ເຮັດບໍລິການໃຫ້ກັບເຮົາໃນມື້ນີ້, ພວກເຂົາທຸກຄົນຕ້ອງຈາກໄປ! ຢ່າຢ່າງໂຊເຊໃນເຮືອນຂອງເຮົາ; ຈົ່ງຢຸດການສວຍໂອກາດທີ່ໄຮ້ຢາງອາຍຢູ່ສະໝໍ່າສະເໝີຂອງເຈົ້າ! ຄົນທີ່ເປັນຂອງຊາຕານລ້ວນແລ້ວແຕ່ເປັນລູກຊາຍຂອງມານຮ້າຍ ແລະ ພິນາດຕະຫຼອດໄປ. ທຸກຄົນທີ່ທ້າທາຍເຮົາກໍຈະອອກຈາກຂ້າງກາຍຂອງເຮົາຢ່າງງຽບໆ ເພື່ອວ່າໄລຍະກ້າວໃນພາລະກິດຂອງເຮົາຈະຖືກຂັດຂວາງໜ້ອຍລົງ ໂດຍບໍ່ມີການລົບກວນເພີ່ມເຕີມ. ທຸກຄົນຈະຖືກດຳເນີນການຕາມການບັນຊາການຂອງເຮົາ ໂດຍບໍ່ມີອຸປະສັກ ຫຼືການຂັດຂວາງ. ທຸກຄົນຈະລົ້ມລົງຕໍ່ໜ້າການຈ້ອງເບິ່ງຂອງເຮົາ ແລະ ຈະຖືກທຳລາຍດ້ວຍການເຜົາໄໝ້ຂອງເຮົາ. ສິ່ງນີ້ສະແດງເຖິງຄວາມມີລິດທານຸພາບສູງສຸດຂອງເຮົາ ແລະ ສະຕິປັນຍາທີ່ສົມບູນຂອງເຮົາ (ສິ່ງທີ່ເຮົາເຮັດໃນລູກຊາຍກົກຂອງເຮົາ). ເຮົາຈະເພີ່ມສະຫງ່າລາສີທີ່ຍິ່ງໃຫຍ່ຂຶ້ນໃຫ້ແກ່ນາມຂອງເຮົາ ແລະ ມັນຈະເພີ່ມສະຫງ່າລາສີທີ່ຍິ່ງໃຫຍ່ຂຶ້ນໃຫ້ແກ່ເຮົາ. ຈາກສິ່ງທີ່ເຮົາເຮັດ ແລະ ຈາກນໍ້າສຽງຂອງເຮົາ,

ພວກເຈົ້າທຸກຄົນສາມາດເຫັນວ່າ ເຮົາໄດ້ສຳເລັດພາລະກິດທັງໝົດຂອງເຮົາໃນເຮືອນຂອງເຮົາ ແລະ ເຮົາເລີ່ມຫັນໄປຫາຊົນຊາດຕ່າງຊາດ. ເຮົາເລີ່ມຕົ້ນພາລະກິດຂອງເຮົາໃນທີ່ນັ້ນ ແລະ ປະຕິບັດບາດກ້າວຕໍ່ໄປຂອງພາລະກິດຂອງເຮົາ.

ພຣະທຳສ່ວນໃຫຍ່ຂອງເຮົາບໍ່ສອດຄ່ອງກັບແນວຄິດຂອງພວກເຈົ້າ, ແຕ່ຢ່າຈາກໄປ ລູກຊາຍຂອງເຮົາເອີຍ. ການທີ່ພວກມັນບໍ່ສອດຄ່ອງກັບແນວຄິດຂອງມະນຸດບໍ່ໄດ້ໝາຍຄວາມວ່າ ພວກມັນບໍ່ແມ່ນພຣະຄຳຂອງເຮົາ. ມັນຄືສິ່ງນີ້ແທ້ໆທີ່ພິສູດວ່າ ເຮົາກ່າວພຣະຄຳເຫຼົ່ານັ້ນຢ່າງແນ່ນອນ. ຖ້າພຣະທຳຂອງເຮົາສອດຄ່ອງກັບແນວຄິດຂອງມະນຸດ, ແລ້ວນັ້ນກໍຈະເປັນພາລະກິດຂອງວິນຍານຊົ່ວຮ້າຍ. ສະນັ້ນເຈົ້າຕ້ອງພະຍາຍາມຫຼາຍຂຶ້ນໃນພຣະທຳຂອງເຮົາ, ເຮັດສິ່ງທີ່ເຮົາເຮັດ ແລະ ຮັກສິ່ງທີ່ເຮົາຮັກ. ຍຸກສຸດທ້າຍນີ້ຍັງເປັນຍຸກທີ່ໄພພິບັດທັງໝົດເກີດຂຶ້ນອີກຄັ້ງ ແລະ ຍິ່ງໄປກວ່ານັ້ນ ມັນເປັນຍຸກທີ່ເຮົາກຳລັງເປີດເຜີຍອຸປະນິໄສທັງໝົດຂອງເຮົາ. ເມື່ອແກອັນບໍລິສັດຂອງເຮົາທັງໝົດເລີ່ມເປົ່າດັງຂຶ້ນ, ຜູ້ຄົນກໍຈະຢ້ານແທ້ໆ; ໃນເວລານັ້ນ ບໍ່ມີຜູ້ໃດກ້າເຮັດສິ່ງຊົ່ວຮ້າຍ, ແຕ່ກົງກັນຂ້າມ ພວກເຂົາຈະກົ້ມລົງຕໍ່ໜ້າເຮົາ, ຊື່ນຊົມສະຕິປັນຍາຂອງເຮົາ ແລະ ຄວາມມີລິດທານຸພາບສູງສຸດຂອງເຮົາ. ໃນທີ່ສຸດແລ້ວ ເຮົາແມ່ນພຣະເຈົ້າທີ່ມີສະຕິປັນຍາ! ຜູ້ໃດສາມາດໂຕ້ແຍ້ງເຮົາໄດ້? ແລ້ວຜູ້ໃດກ້າລຸກຂຶ້ນຕໍ່ສູ້ເຮົາ? ຜູ້ໃດກ້າບໍ່ຍອມຮັບສະຕິປັນຍາຂອງເຮົາ? ຜູ້ໃດກ້າບໍ່ຮູ້ຈັກຄວາມມີລິດທານຸພາບສູງສຸດຂອງເຮົາ? ເມື່ອພຣະວິນຍານຂອງເຮົາກຳລັງປະຕິບັດພາລະກິດທີ່ຍິ່ງໃຫຍ່ໃນທຸກຫົນແຫ່ງ, ທຸກຄົນກໍຮູ້ຈັກຄວາມມີລິດທານຸພາບສູງສຸດຂອງເຮົາ, ແຕ່ເປົ້າໝາຍຂອງເຮົາກໍຍັງບໍ່ໄດ້ຖືກບັນລຸ. ເຮົາຕ້ອງການໃຫ້ຜູ້ຄົນໄດ້ເຫັນເຖິງຄວາມມີລິດທານຸພາບສູງສຸດຂອງເຮົາ, ສະຕິປັນຍາຂອງເຮົາ ແລະ ສະຫງ່າລາສີຂອງຕົວຕົນຂອງເຮົາ ເຊິ່ງເປັນຜົນຕາມມາຈາກຄວາມໂກດຮ້າຍຂອງເຮົາ. (ທຸກສິ່ງເຫຼົ່ານີ້ຖືກສະແດງອອກໃນລູກຊາຍກົກ; ສິ່ງນີ້ເປັນຈິງຢ່າງແນ່ນອນ. ນອກຈາກພວກເຂົາແລ້ວ ບໍ່ມີຜູ້ໃດສາມາດເປັນສ່ວນໜຶ່ງໃນຕົວຕົນຂອງເຮົາ; ສິ່ງນີ້ຖືກເຮົາກຳນົດໄວ້). ໃນເຮືອນຂອງເຮົາແມ່ນມີຄວາມລຶກລັບທີ່ບໍ່ສິ້ນສຸດ ເຊິ່ງຜູ້ຄົນບໍ່ສາມາດຢັ່ງເຖິງໄດ້. ເມື່ອເຮົາເວົ້າອອກມາ, ຜູ້ຄົນກໍເວົ້າວ່າ ເຮົາໄຮ້ຄວາມປານີເກີນໄປ. ພວກເຂົາເວົ້າວ່າ ຫຼາຍຄົນຮັກເຮົາຈົນເຖິງລະດັບໃດໜຶ່ງແລ້ວ. ແລ້ວເປັນຫຍັງເຮົາຈຶ່ງຊີ້ແຈງວ່າ ຄົນເຫຼົ່ານີ້ເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່? ຍິ່ງໄປກວ່ານັ້ນ ເປັນຫຍັງເຮົາຈຶ່ງປະຖິ້ມພວກເຂົາເທື່ອລະຄົນ? ມັນຈະບໍ່ດີກວ່າບໍທີ່ຈະມີຫຼາຍຄົນຕື່ມຢູ່ໃນເຮືອນຂອງເຮົາ? ຢ່າງໃດກໍຕາມ ເຮົາສືບຕໍ່ປະຕິບັດໃນລັກສະນະນີ້. ບໍ່ສາມາດມີຕົວເລກທີ່ເຮົາໄດ້ກຳນົດລ່ວງໜ້າຫຼາຍກວ່າ ຫຼື ໜ້ອຍກວ່າແມ່ນແຕ່ຕົວເລກດຽວ. (ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ. ບໍ່ພຽງແຕ່ມັນບໍ່ສາມາດຖືກປ່ຽນແປງໂດຍມະນຸດຄົນໃດ, ແມ່ນແຕ່ເຮົາເອງກໍບໍ່ສາມາດປ່ຽນແປງມັນໄດ້, ຍ້ອນເຮົາຕ້ອງບໍ່ຍອມຈຳນົນຕໍ່ໜ້າຊາຕານ. ສິ່ງນີ້ກໍພຽງພໍທີ່ຈະເຮັດໃຫ້ສະຕິປັນຍາ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາປາກົດແຈ້ງ. ເຮົາຄືພຣະເຈົ້າອົງດຽວ. ມະນຸດກົ້ມລົງຕໍ່ໜ້າເຮົາ; ເຮົາບໍ່ຍອມຈຳນົນຕໍ່ໜ້າມະນຸດ). ນີ້ແມ່ນຈຸດທີ່ເຮັດໃຫ້ຊາຕານອັບອາຍຫຼາຍທີ່ສຸດແທ້ໆ. ມະນຸດທີ່ເຮົາໄດ້ຄັດເລືອກກໍລ້ວນແລ້ວແຕ່ຖ່ອມຕົນ, ອ່ອນນ້ອມ, ເຊື່ອຟັງ ແລະ ຊື່ສັດ ແລະ ພວກເຂົາສາມາດຮັບໃຊ້ເຮົາດ້ວຍຄວາມຖ່ອມຕົນ ແລະ ດ້ວຍຄວາມຕໍ່າຕ້ອຍ.

(ຊາຕານປາຖະໜາທີ່ຈະໃຊ້ຂໍ້ແທ້ຈິງນີ້ເພື່ອເຮັດໃຫ້ເຮົາອັບອາຍ, ແຕ່ເຮົາເອົາຊະນະຊາຕານຄືນ). ໃນປະຊາຊົນເຫຼົ່ານີ້, ອຸປະນິໄສຂອງເຮົາຈຶ່ງສາມາດເຫັນໄດ້. ເມື່ອເຮົາກັບຄືນມາຫຼັງຈາກທີ່ໄດ້ຮັບໄຊຊະນະໃນການສູ້ຮົບ, ເຮົາຈະເຈີມລູກຊາຍກົກຂອງເຮົາໃຫ້ເປັນກະສັດໃນອານາຈັກຂອງເຮົາ ແລະ ມີແຕ່ເມື່ອນັ້ນ ເຮົາຈຶ່ງຈະເລີ່ມພັກຜ່ອນ, ຍ້ອນພວກເຂົາຈະປົກຄອງດັ່ງກະສັດຄຽງຂ້າງເຮົາ. ລູກຊາຍກົກຂອງເຮົາເປັນຕົວແທນໃຫ້ແກ່ເຮົາ ແລະ ພວກເຂົາສະແດງອອກເຖິງເຮົາ. ໃນການບໍລິການທີ່ຖ່ອມຕົນ ແລະ ຕໍ່າຕ້ອຍ, ພວກເຂົາຍອມຕໍ່ເຮົາ; ໃນຄວາມຊື່ສັດຂອງພວກເຂົາ, ພວກເຂົາປະຕິບັດພຣະທໍາຂອງເຮົາ; ໃນຄວາມຊື່ສັດຂອງພວກເຂົາ, ພວກເຂົາເວົ້າທີ່ສິ່ງທີ່ເຮົາເວົ້າ; ແລະ ໃນຄວາມຖ່ອມຕົນຂອງພວກເຂົາ, ພວກເຂົານໍາສະຫງ່າລາສີມາສູ່ນາມຂອງເຮົາ (ບໍ່ແມ່ນດ້ວຍຄວາມອວດດີ ຫຼື ຄວາມໂຫດຮ້າຍ, ແຕ່ດ້ວຍຄວາມສະຫງ່າຜ່າເຜີຍ ແລະ ຄວາມໂກດຮ້າຍ). ລູກຊາຍກົກຂອງເຮົາເອີຍ! ມັນແມ່ນເວລາທີ່ຈະພິພາກສາໂລກຈັກກະວານ! ເຮົາມອບຄວາມມົ່ງຄູນໃຫ້ແກ່ພວກເຈົ້າ, ເຮົາມອບສິດອໍານາດໃຫ້ແກ່ພວກເຈົ້າ ແລະ ເຮົາໃຫ້ລາງວັນແກ່ພວກເຈົ້າດ້ວຍສ່ວນແບ່ງໃນພອນ! ທຸກສິ່ງຖືກເຮັດໃຫ້ສໍາເລັດແລ້ວ ແລະ ມັນລ້ວນແລ້ວແຕ່ຖືກຄວບຄຸມ ແລະ ຈັດແຈງໂດຍພວກເຈົ້າ ຍ້ອນເຮົາເປັນພຣະບິດາຂອງພວກເຈົ້າ; ເຮົາເປັນເສົາທີ່ເຂັ້ມແຂງຂອງພວກເຈົ້າ, ເຮົາເປັນທີ່ກໍາບັງຂອງພວກເຈົ້າ ແລະ ເຮົາເປັນຜູ້ສະໜັບສະໜູນຂອງພວກເຈົ້າ. ຍິ່ງໄປກວ່ານັ້ນ ເຮົາເປັນຜູ້ທີ່ມີລິດທານຸພາບສູງສຸດຂອງພວກເຈົ້າ; ເຮົາເປັນທຸກສິ່ງຂອງພວກເຈົ້າ! ທຸກສິ່ງຢູ່ໃນມືຂອງເຮົາ ແລະ ທຸກສິ່ງກໍຢູ່ໃນມືຂອງພວກເຈົ້າເຊັ່ນກັນ. ສິ່ງນີ້ບໍ່ໄດ້ລວມເຖິງແຕ່ມື້ນີ້ເທົ່ານັ້ນ, ແຕ່ຍັງລວມເຖິງມື້ວານ ແລະ ແມ່ນແຕ່ມື້ອື່ນ! ສິ່ງນີ້ບໍ່ມີຄ່າໃຫ້ສະເຫຼີມສະຫຼອງບໍ? ສິ່ງນີ້ບໍ່ມີຄ່າໃຫ້ພວກເຈົ້າຮ້ອງໂຮບໍ? ພວກເຈົ້າທຸກຄົນຮັບເອົາສ່ວນທີ່ພວກເຈົ້າສົມຄວນໄດ້ຮັບຈາກເຮົາ! ເຮົາມອບທຸກສິ່ງຂອງເຮົາໃຫ້ແກ່ພວກເຈົ້າ ໂດຍບໍ່ຮັກສາແມ່ນແຕ່ສ່ວນເລັກນ້ອຍສໍາລັບເຮົາເອງ ຍ້ອນຊັບສິນທັງໝົດຂອງເຮົາແມ່ນຂອງພວກເຈົ້າ ແລະ ຄວາມຮັ່ງມີຂອງເຮົາກໍມີໃຫ້ແກ່ພວກເຈົ້າ. ນີ້ຄືເຫດຜົນທີ່ເຮົາເວົ້າວ່າ "ມັນດີຫຼາຍ" ຫຼັງຈາກທີ່ໄດ້ສ້າງພວກເຈົ້າ.

ພວກເຈົ້າຮູ້ບໍວ່າຜູ້ໃດຊີ້ນໍາສິ່ງທີ່ພວກເຈົ້າເຮັດ, ຄິດ ແລະ ເວົ້າໃນມື້ນີ້? ແມ່ນຫຍັງຄືຈຸດປະສົງທີ່ຢູ່ເບື້ອງຫຼັງການກະທໍາຂອງພວກເຈົ້າ? ເຮົາຂໍຖາມພວກເຈົ້າວ່າ: ພວກເຈົ້າເຂົ້າຮ່ວມງານດອງຂອງພຣະເມສານ້ອຍໄດ້ແນວໃດ? ມັນແມ່ນມື້ນີ້ບໍ? ຫຼື ມັນແມ່ນໃນອະນາຄົດ? ງານດອງຂອງພຣະເມສານ້ອຍແມ່ນຫຍັງ? ພວກເຈົ້າບໍ່ຮູ້ ແມ່ນບໍ? ດີ ແລ້ວເຮົາຈະອະທິບາຍມັນໃຫ້ແກ່ພວກເຈົ້າວ່າ: ເມື່ອເຮົາມາສູ່ໂລກມະນຸດ, ເຮົາໄດ້ຈັດແຈງຜູ້ຄົນ, ເລື່ອງ ແລະ ສິ່ງຂອງທຸກປະເພດເພື່ອຮັບໃຊ້ມະນຸດທີ່ເຮົາເປັນໃນມື້ນີ້. ບັດນີ້ເມື່ອທຸກສິ່ງໄດ້ສໍາເລັດແລ້ວ ເຮົາກໍໂຍນຜູ້ໃຫ້ບໍລິການຖິ້ມ. ສິ່ງນີ້ກ່ຽວຂ້ອງຫຍັງກັບງານດອງ? ເມື່ອຜູ້ຄົນເຫຼົ່ານີ້ໃຫ້ບໍລິການແກ່ເຮົາ ນັ້ນກໍຄື ເມື່ອເຮົາຖືກສ້າງໃຫ້ເຂົ້າສູ່ພຣະເມສານ້ອຍ ເຮົາກໍຮູ້ສຶກເຖິງລົດຊາດຂອງງານດອງ. ເວົ້າອີກຢ່າງກໍຄື ຄວາມເຈັບປວດທັງໝົດທີ່ເຮົາໄດ້ທົນທຸກ, ທຸກສິ່ງທີ່ເຮົາໄດ້ເຮັດ, ທຸກສິ່ງທີ່ເຮົາໄດ້ເວົ້າ, ທຸກຄົນທີ່ເຮົາໄດ້ຜະເຊີນ ແລະ ທຸກສິ່ງທີ່ເຮົາໄດ້ເຮັດໃນຊົ່ວຊີວິດຂອງເຮົາແມ່ນປະກອບເປັນງານດອງ. ຫຼັງຈາກທີ່ມະນຸດທີ່ເຮົາເປັນໄດ້ຖືກເຈີມແລ້ວ, ພວກເຈົ້າກໍເລີ່ມຕິດຕາມເຮົາ (ແລະ ໃນເວລານີ້ ເຮົາກໍກາຍມາເປັນພຣະເມສານ້ອຍ); ສະນັ້ນ ພາຍໃຕ້ການນໍາພາ

ຂອງເຮົາ ພວກເຈົ້າໄດ້ຜະເຊີນກັບຄວາມເຈັບປວດ ແລະ ໄພພິບັດທຸກລັກສະນະ, ຖືກໂລກປະຖິ້ມ ແລະ ໃສ່ຮ້າຍ, ຖືກຄອບຄົວປະຖິ້ມ ແລະ ດຳລົງຊີວິດຢູ່ພາຍໃຕ້ພອນຂອງເຮົາ. ທຸກສິ່ງເຫຼົ່ານີ້ແມ່ນສ່ວນຕ່າງໆຂອງງານດອງຂອງພຣະເມສານ້ອຍ. ເຮົາໃຊ້ຄຳວ່າ "ງານດອງ" ຍ້ອນທຸກສິ່ງທີ່ເຮົານຳພາໃຫ້ພວກເຈົ້າເຮັດແມ່ນເພື່ອຈຸດປະສົງໃນການໄດ້ຮັບເອົາພວກເຈົ້າ. ເຖິງຢ່າງໃດກໍຕາມ ນີ້ແມ່ນພາກສ່ວນທັງໝົດຂອງງານລ້ຽງ. ໃນອະນາຄົດ ຫຼື ໃນປັດຈຸບັນ, ຄົນໃດໜຶ່ງສາມາດເວົ້າໄດ້ວ່າ ທຸກສິ່ງທີ່ພວກເຈົ້າໄດ້ຊື່ນຊົມ, ທຸກສິ່ງທີ່ພວກເຈົ້າໄດ້ຮັບ ແລະ ອຳນາດຂອງກະສັດທັງໝົດທີ່ພວກເຈົ້າມີຮ່ວມກັນກັບເຮົາ ແມ່ນສ່ວນໜຶ່ງຂອງງານລ້ຽງ. ຄວາມຮັກຂອງເຮົາມາເຖິງທຸກຄົນທີ່ຮັກເຮົາ. ຄົນທີ່ເຮົາຮັກຈະຄົງຢູ່ຕະຫຼອດໄປ, ຈະບໍ່ຖືກກຳຈັດຈັກເທື່ອ ແລະ ຈະຢູ່ພາຍໃນຄວາມຮັກຂອງເຮົາຕະຫຼອດໄປເປັນນິດ. ມັນຄົງຢູ່ຕະຫຼອດໄປ!

# ບົດທີ 110

ເມື່ອທຸກສິ່ງຖືກເປີດເຜີຍອອກ, ນັ້ນຈະເປັນເວລາທີ່ເຮົາຈະພັກຜ່ອນ ແລະ ຍິ່ງໄປກວ່ານັ້ນ ມັນຈະເປັນເວລາທີ່ທຸກສິ່ງເປັນລະບົບລະບຽບ. ເຮົາປະຕິບັດພາລະກິດຂອງເຮົາດ້ວຍຕົວເຮົາເອງ; ເຮົາປັ້ນແຕ່ງ ແລະ ຈັດແຈງທຸກສິ່ງດ້ວຍຕົນເອງ. ເມື່ອເຮົາອອກມາຈາກຊີໂອນ ແລະ ເມື່ອເຮົາກັບຄືນມາ ແລະ ເມື່ອລູກຊາຍກົກຂອງເຮົາໄດ້ຖືກເຮົາເຮັດໃຫ້ສົມບູນ, ເຮົາກໍຈະໄດ້ສຳເລັດພາລະກິດທີ່ຍິ່ງໃຫຍ່ຂອງເຮົາແລ້ວ. ໃນແນວຄິດຂອງຜູ້ຄົນ ສິ່ງທີ່ເກີດຂຶ້ນຕ້ອງສາມາດເຫັນໄດ້ ແລະ ສຳຜັດໄດ້, ແຕ່ຕາມທີ່ເຮົາເຫັນນັ້ນ ທຸກສິ່ງຄົບຖ້ວນໃນຊ່ວງເວລາທີ່ເຮົາວາງແຜນໄວ້. ຊີໂອນແມ່ນບ່ອນຢູ່ອາໄສຂອງເຮົາ ແລະ ມັນຍັງເປັນຈຸດໝາຍປາຍທາງຂອງເຮົາ; ແມ່ນຢູ່ທີ່ນັ້ນທີ່ເຮົາຈະເປີດເຜີຍຄວາມລິດທານຸພາບສູງສຸດຂອງເຮົາ ແລະ ແມ່ນຢູ່ທີ່ນັ້ນທີ່ລູກຊາຍກົກຂອງເຮົາ ແລະ ເຮົາຈະຮ່ວມຄວາມສຸກນຳກັນດັ່ງຄອບຄົວ. ແມ່ນຢູ່ທີ່ນັ້ນທີ່ເຮົາຈະດຳລົງຊີວິດຢູ່ກັບພວກເຂົາຕະຫຼອດໄປເປັນນິດ. ຊີໂອນ ສະຖານທີ່ສວຍງາມເຊິ່ງເປັນບ່ອນທີ່ຜູ້ຄົນປາຖະໜາຫາ. ຜູ້ຄົນນັບຈຳນວນບໍ່ຖ້ວນປາຖະໜາທີ່ຈະໄປທີ່ຊີໂອນຕະຫຼອດຍຸກຕ່າງໆ, ແຕ່ນັບຈາກເລີ່ມຕົ້ນ ບໍ່ມີແມ່ນແຕ່ຄົນດຽວທີ່ໄດ້ເຂົ້າໄປ. (ບໍ່ມີແມ່ນແຕ່ໄພ່ພົນ ແລະ ຜູ້ປະກາດພຣະທຳຄົນໃດຈາກຍຸກຕ່າງໆໃນອະດີດເຄີຍເຂົ້າໄປໃນຊີໂອນ; ນີ້ກໍຍ້ອນເຮົາກຳລັງຄັດເລືອກລູກຊາຍກົກຂອງເຮົາໃນຍຸກສຸດທ້າຍ ແລະ ພວກເຂົາທຸກຄົນກໍເກີດໃນເວລານີ້; ຜ່ານທາງສິ່ງນີ້ ຄວາມເມດຕາຂອງເຮົາ ແລະ ຄວາມກະລຸນາຂອງເຮົາ ເຊິ່ງເຮົາໄດ້ກ່າວເຖິງ ແມ່ນຈະຊັດເຈນຍິ່ງຂຶ້ນ). ທຸກຄົນທີ່ເປັນລູກຊາຍກົກໃນຕອນນີ້ຈະເຂົ້າສູ່ຊີໂອນພ້ອມກັບເຮົາ ແລະ ມີຄວາມສຸກກັບພອນນັ້ນ. ເຮົາກຳລັງຍົກລະດັບລູກຊາຍກົກຂອງເຮົາຈົນເຖິງລະດັບໃດໜຶ່ງ ເພາະພວກເຂົາມີຄວາມສາມາດຂອງເຮົາ ແລະ ຮູບລັກສະນະທີ່ມີສະຫງ່າລາສີຂອງເຮົາ ແລະ ເພາະພວກເຂົາສາມາດເປັນພະຍານໃຫ້ແກ່ເຮົາ, ຖວາຍສະຫງ່າລາສີແກ່ເຮົາ ແລະ ດຳລົງຊີວິດຢູ່ໃນຕົວເຮົາ. ຍິ່ງໄປກວ່ານັ້ນ ພວກເຂົາສາມາດເອົາຊະນະຊາຕານ ແລະ ເຮັດໃຫ້ມັງກອນຜູ້ຍິ່ງໃຫຍ່ອັບອາຍ. ນີ້ກໍຍ້ອນລູກຊາຍກົກຂອງເຮົາເປັນຍິງສາວທີ່ບໍລິສຸດແທ້ໆ; ພວກເຂົາເປັນຄົນທີ່ເຮົາຮັກ ແລະ ພວກເຂົາເປັນຄົນທີ່ເຮົາໄດ້ເລືອກ ແລະ ຮັກໄຄ່. ເຫດຜົນທີ່ເຮົາຍົກລະດັບພວກເຂົາກໍຄື ພວກເຂົາສາມາດຢືນຢູ່ໃນຕຳແໜ່ງຂອງພວກເຂົາເອງ ແລະ ສາມາດຮັບໃຊ້ເຮົາຢ່າງຖ່ອມຕົນ ແລະ ໂດຍບໍ່ເປັນທີ່ຮູ້ຈັກ ແລະ ເປັນພະຍານທີ່ມີພະລັງໃຫ້ແກ່ເຮົາ. ເຮົາໄດ້ເສຍສະຫຼະກຳລັງທັງໝົດຂອງເຮົາກັບລູກຊາຍກົກ ແລະ ເຮົາໄດ້ຈັດແຈງຜູ້ຄົນ, ເຫດການ ແລະ ສິ່ງຂອງທຸກປະເພດສຳລັບການບໍລິການຂອງພວກເຂົາຢ່າງລະມັດລະວັງ. ໃນທີ່ສຸດແລ້ວ ເຮົາຈະເຮັດໃຫ້ທຸກຄົນໄດ້ເຫັນເຖິງສະຫງ່າລາສີຂອງເຮົາຢ່າງສົມບູນຜ່ານທາງລູກຊາຍກົກຂອງເຮົາ ແລະ ເຮົາຈະເຮັດໃຫ້ທຸກຄົນເຊື່ອໃນຕົວເຮົາຢ່າງສົມບູນ ຍ້ອນພວກເຂົາ. ເຮົາຈະບໍ່ບັງຄັບມານຮ້າຍ ແລະ ເຮົາບໍ່ຢ້ານຄວາມດຸຮ້າຍຂອງພວກເຂົາ ຫຼື ຄວາມເລີນເລີ້ຂອງພວກເຂົາ ຍ້ອນເຮົາມີພະຍານ ແລະ ເຮົາມີສິດອຳນາດໃນມືຂອງເຮົາ. ບັດນີ້ ຈົ່ງຟັງເຮົາ ຄົນທີ່ເປັນພັກພວກຂອງຊາຕານເອີຍ! ເປົ້າໝາຍທີ່ຢູ່ເບື້ອງຫຼັງພຣະທຳທຸກຂໍ້ທີ່ເຮົາໄດ້ກ່າວອອກມາ ແລະ ທຸກສິ່ງທີ່ເຮົາເຮັດແມ່ນເພື່ອເຮັດໃຫ້ລູກຊາຍກົກຂອງເຮົາສົມບູນ.

ສະນັ້ນ ເຈົ້າຕ້ອງເອົາໃຈໃສ່ຄຳສັ່ງຂອງເຮົາ ແລະ ເຊື່ອຟັງລູກຊາຍກົກຂອງເຮົາ; ບໍ່ດັ່ງນັ້ນ ເຮົາຈະຈັດການກັບເຈົ້າໂດຍເຮັດໃຫ້ເຈົ້າທົນທຸກກັບຄວາມຫາຍະນະໃນທັນທີ! ລູກຊາຍກົກຂອງເຮົາໄດ້ເລີ່ມຕົ້ນປະຕິບັດບົດບັນຍັດການປົກຄອງຂອງເຮົາແລ້ວ ເພາະພວກເຂົາເປັນຄົນດຽວທີ່ສົມຄວນແກ່ການດຳລົງບັນລັງຂອງເຮົາ; ເຮົາໄດ້ເຈີມພວກເຂົາແລ້ວ. ຄົນທີ່ບໍ່ຍອມຕໍ່ລູກຊາຍກົກຂອງເຮົາແມ່ນບໍ່ມີປະໂຫຍດຢ່າງແນ່ນອນ ແລະ ຖືກມັງກອນແດງຜູ້ຍິ່ງໃຫຍ່ສົ່ງມາເພື່ອກໍ່ກວນແຜນການຄຸ້ມຄອງເຮົາໂດຍບໍ່ຕ້ອງສົງໄສ. ຄົນຊົ່ວຮ້າຍດັ່ງກ່າວຈະຖືກຂັບໄລ່ອອກຈາກເຮືອນຂອງເຮົາໂດຍທັນທີ. ເຮົາບໍ່ຕ້ອງການສິ່ງຂອງປະເພດດັ່ງກ່າວເພື່ອໃຫ້ບໍລິການແກ່ເຮົາ; ພວກເຂົາຈະພົບພໍ້ກັບຄວາມພິນາດຕະຫຼອດໄປ ແລະ ພວກເຂົາຈະພົບພໍ້ກັບມັນໃນໄວໆນີ້ ໂດຍບໍ່ຕ້ອງຊັກຊ້າ! ຄົນທີ່ໃຫ້ບໍລິການແກ່ເຮົາຕ້ອງໄດ້ຮັບການຮອງຮັບຈາກເຮົາແລ້ວ; ພວກເຂົາຕ້ອງເຊື່ອຟັງໂດຍບໍ່ຕ້ອງກັງວົນກ່ຽວກັບລາຄາທີ່ພວກເຂົາອາດຕ້ອງໄດ້ຈ່າຍ. ຖ້າພວກເຂົາກະບົດ, ແລ້ວພວກເຂົາກໍບໍ່ສົມຄວນທີ່ຈະໃຫ້ບໍລິການແກ່ເຮົາ; ເຮົາບໍ່ຕ້ອງການສິ່ງຖືກສ້າງດັ່ງກ່າວ. ພວກເຂົາຄວນຟ້າວອອກໄປຈາກທີ່ນີ້; ເຮົາບໍ່ຕ້ອງການພວກເຂົາເດັດຂາດ! ເຈົ້າຕ້ອງຊັດເຈນກ່ຽວກັບສິ່ງນີ້ໃນຕອນນີ້! ຄົນທີ່ໃຫ້ບໍລິການແກ່ເຮົາຕ້ອງເຮັດໃຫ້ດີ ແລະ ບໍ່ກໍ່ບັນຫາຫຍັງ. ຖ້າເຈົ້າຮູ້ສຶກວ່າເຈົ້າບໍ່ມີຄວາມຫວັງ ແລະ ເລີ່ມກໍ່ບັນຫາ, ແລ້ວເຮົາຈະຈັດການກັບເຈົ້າໂດຍບໍ່ລັງເລ! ພວກເຈົ້າເຫຼົ່ານັ້ນທີ່ໃຫ້ບໍລິການແກ່ເຮົາຊັດເຈນກ່ຽວກັບເລື່ອງນັ້ນບໍ? ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ.

ການເປັນພະຍານໃຫ້ແກ່ເຮົາແມ່ນໜ້າທີ່ຂອງລູກຊາຍກົກຂອງເຮົາ ສະນັ້ນ ເຮົາບໍ່ໄດ້ຮຽກຮ້ອງໃຫ້ພວກເຈົ້າເຮັດຫຍັງເພື່ອເຮົາ; ເຮົາຈະພໍໃຈຕາບໃດທີ່ພວກເຈົ້າປະຕິບັດໜ້າທີ່ຂອງພວກເຈົ້າຢ່າງຖືກຕ້ອງ ແລະ ມີຄວາມສຸກກັບພອນທີ່ເຮົາປະທານໃຫ້ແກ່ພວກເຈົ້າ. ເມື່ອເຮົາເດີນທາງທົ່ວຈັກກະວານທັງປວງ ແລະ ສຸດປາຍແຜ່ນດິນໂລກ, ເຮົາໄດ້ຄັດເລືອກເອົາລູກຊາຍກົກຂອງເຮົາ ແລະ ເຮັດໃຫ້ພວກເຂົາສົມບູນ. ນີ້ແມ່ນສິ່ງທີ່ເຮົາໄດ້ສຳເລັດກ່ອນທີ່ເຮົາສ້າງໂລກ; ບໍ່ມີຜູ້ໃດທ່າມກາງມະນຸດຊາດຮູ້ຈັກເຖິງເລື່ອງນີ້, ແຕ່ພາລະກິດຂອງເຮົາຖືກບັນລຸຢ່າງງຽບໆ. ຂໍ້ແທ້ຈິງນີ້ບໍ່ສອດຄ່ອງກັບແນວຄິດຂອງມະນຸດ! ເຖິງຢ່າງໃດກໍຕາມ ຂໍ້ແທ້ຈິງກໍແມ່ນຂໍ້ແທ້ຈິງ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງພວກມັນໄດ້. ມານຮ້າຍທັງໃຫຍ່ ແລະ ນ້ອຍກໍໄດ້ເປີດເຜີຍຮູບຮ່າງທີ່ແທ້ຈິງຂອງພວກມັນຜ່ານທາງການທຳທ່າຂອງພວກມັນ ແລະ ຕົກຢູ່ພາຍໃຕ້ການຂ້ຽນຕີຂອງເຮົາໃນຫຼາຍໆລະດັບ. ມີບາດກ້າວໃນພາລະກິດຂອງເຮົາ ແລະ ມີສະຕິປັນຍາໃນພຣະທຳຂອງເຮົາ. ຈາກການກະທຳ ແລະ ພຣະທຳຂອງເຮົາ, ພວກເຈົ້າໄດ້ເຫັນຫຍັງບໍ? ເຮົາພຽງແຕ່ເຮັດ ແລະ ເວົ້າສິ່ງຕ່າງໆບໍ? ພຣະທຳຂອງເຮົາເປັນສິ່ງທີ່ຮຸນແຮງ, ໃຫ້ການພິພາກສາ ຫຼື ປອບໃຈບໍ? ສິ່ງນັ້ນແມ່ນງ່າຍດາຍເກີນໄປຫຼາຍ, ແຕ່ສຳລັບມະນຸດຊາດແລ້ວການເຫັນສິ່ງນີ້ກໍເປັນພຽງເລື່ອງງ່າຍເທົ່ານັ້ນ. ບໍ່ໄດ້ມີພຽງແຕ່ສະຕິປັນຍາ, ການພິພາກສາ, ຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ ແລະ ການປອບໃຈໃນພຣະທຳຂອງເຮົາເທົ່ານັ້ນ, ແຕ່ຍິ່ງໄປກວ່ານັ້ນພວກມັນມີສິ່ງທີ່ເຮົາມີ ແລະ ເປັນ. ພຣະທຳທຸກຂໍ້ຂອງເຮົາແມ່ນຄວາມລຶກລັບທີ່ບໍ່ສາມາດຖືກເປີດເຜີຍໄດ້ໂດຍມະນຸດຊາດ; ພຣະທຳຂອງເຮົາແມ່ນບໍ່ສາມາດຢັ່ງຮູ້ໄດ້ຢ່າງທີ່ສຸດ ແລະ ເຖິງແມ່ນວ່າຄວາມລຶກ

ລັບໄດ້ຖືກເປີດເຜີຍ, ພວກມັນກໍຍັງຢູ່ນອກກອບຈິນຕະນາການ ແລະ ຄວາມເຂົ້າໃຈຂອງມະນຸດຊາດ ໂດຍອີງຕາມຄວາມສາມາດຂອງມະນຸດຊາດ. ພຣະທຳທີ່ເຮົາເຂົ້າໃຈໄດ້ຢ່າງງ່າຍດາຍທີ່ສຸດແມ່ນສິ່ງທີ່ຫຍຸ້ງຍາກທີ່ສຸດທີ່ຜູ້ຄົນຈະເຂົ້າໃຈ, ສະນັ້ນ ຄວາມແຕກຕ່າງລະຫວ່າງເຮົາ ແລະ ພວກເຂົາຈຶ່ງຄືກັບຄວາມແຕກຕ່າງລະຫວ່າງສະຫວັນ ແລະ ແຜ່ນດິນໂລກ. ນີ້ຄືເຫດຜົນທີ່ເຮົາຕ້ອງການປ່ຽນແປງຮູບຮ່າງຂອງລູກຊາຍກົກຂອງເຮົາຢ່າງສົມບູນ ແລະ ເຮັດໃຫ້ພວກເຂົາເຂົ້າສູ່ຮ່າງກາຍຢ່າງສິ້ນເຊີງ. ໃນອະນາຄົດ, ພວກເຂົາຈະບໍ່ພຽງແຕ່ເຂົ້າສູ່ຮ່າງກາຍຈາກເນື້ອໜັງ, ແຕ່ພວກເຂົາຈະປ່ຽນແປງຮູບຮ່າງຂອງພວກເຂົາຈົນເຖິງລະດັບທີ່ແຕກຕ່າງກັນອອກໄປ ໃນຂະນະທີ່ຢູ່ພາຍໃນເນື້ອໜັງ. ນີ້ແມ່ນແຜນການຂອງເຮົາ. ມັນແມ່ນສິ່ງທີ່ມະນຸດບໍ່ສາມາດເຮັດໄດ້; ພວກເຂົາບໍ່ມີທາງເຮັດມັນໄດ້ຢ່າງແນ່ນອນ. ສະນັ້ນ ເຖິງແມ່ນວ່າເຮົາໄດ້ອະທິບາຍສິ່ງນີ້ໃຫ້ກັບພວກເຈົ້າຢ່າງລະອຽດ, ພວກເຈົ້າກໍຍັງຈະບໍ່ເຂົ້າໃຈ; ພວກເຈົ້າພຽງແຕ່ສາມາດເຂົ້າສູ່ຄວາມຮູ້ສຶກເຖິງສິ່ງທີ່ເໜືອທຳມະຊາດ. ນີ້ກໍເພາະເຮົາເປັນພຣະເຈົ້າທີ່ມີສະຕິປັນຍາ.

ເມື່ອພວກເຈົ້າໄດ້ເຫັນເຖິງຄວາມລຶກລັບ, ພວກເຈົ້າທຸກຄົນກໍມີປະຕິກິລິຍາຕອບໂຕ້ດ້ວຍວິທີການບາງຢ່າງ. ເຖິງແມ່ນວ່າ ໃນສ່ວນເລິກ ພວກເຈົ້າບໍ່ຍອມຮັບ ຫຼື ຮັບຮູ້ຄວາມລຶກລັບເຫຼົ່ານີ້, ພວກເຈົ້າກໍຮັບຮູ້ພວກມັນທາງຄຳເວົ້າ. ຜູ້ຄົນແບບນີ້ແມ່ນຫຼອກລວງທີ່ສຸດ ແລະ ເມື່ອເຮົາເປີດເຜີຍຄວາມລຶກລັບເຮົາກໍຈະກຳຈັດ ແລະ ປະຖິ້ມພວກເຂົາເທື່ອລະຄົນ. ເຖິງຢ່າງໃດກໍຕາມ ທຸກສິ່ງທີ່ເຮົາເຮັດແມ່ນເກີດຂຶ້ນຕາມບາດກ້າວ. ເຮົາບໍ່ເຮັດສິ່ງຕ່າງໆຢ່າງຮີບດ່ວນ ຫຼື ເຮົາບໍ່ໄດ້ດ່ວນສະຫຼຸບຢ່າງຕາບອດ; ນີ້ກໍເພາະເຮົາມີອຸປະນິໄສທີ່ສັກສິດ. ຜູ້ຄົນບໍ່ສາມາດໄດ້ຮັບມຸມມອງທີ່ຊັດເຈນຢ່າງແນ່ນອນ ກ່ຽວກັບສິ່ງທີ່ເຮົາກຳລັງເຮັດໃນປັດຈຸບັນ ຫຼື ກ່ຽວກັບສິ່ງທີ່ເຮົາຈະເຮັດໃນບາດກ້າວຕໍ່ໄປ. ມີແຕ່ເມື່ອເຮົາກ່າວເຖິງພຣະທຳໃນໜຶ່ງບາດກ້າວ, ວິທີການທີ່ເຮົາປະຕິບັດພາລະກິດຈຶ່ງເຄື່ອນໄປຂ້າງໜ້າກັບເຮົາໜຶ່ງບາດກ້າວ. ທຸກສິ່ງເກີດຂຶ້ນພາຍໃນພຣະທຳຂອງເຮົາ ແລະ ທຸກສິ່ງຖືກເປີດເຜີຍພາຍໃນພຣະທຳຂອງເຮົາ, ສະນັ້ນບໍ່ຄວນມີໃຜໃຈຮ້ອນ; ການໃຫ້ບໍລິການກັບເຮົາກໍພຽງພໍຢ່າງເໝາະສົມແລ້ວ. ກ່ອນໜ້າຍຸກຕ່າງໆ, ເຮົາໄດ້ທຳນາຍກ່ຽວກັບຕົ້ນໝາກເດື່ອ, ແຕ່ຕະຫຼອດຍຸກຕ່າງເປັນຕົ້ນມາ, ບໍ່ມີຜູ້ໃດໄດ້ເຫັນຕົ້ນໝາກເດື່ອ ແລະ ບໍ່ມີຜູ້ໃດສາມາດອະທິບາຍມັນໄດ້ ແລະ ເຖິງແມ່ນວ່າຄຳເວົ້າເຫຼົ່ານີ້ຖືກກ່າວເຖິງໃນການສັນລະເສີນກ່ອນໜ້ານີ້, ບໍ່ມີຜູ້ໃດຮູ້ຈັກຄວາມໝາຍທີ່ແທ້ຈິງຂອງພວກມັນ. ຄຳເວົ້າເຫຼົ່ານີ້ເຮັດໃຫ້ຜູ້ຄົນສັບສົນເຊັ່ນດຽວກັບວະລີ "ໄພພິບັດທີ່ຍິ່ງໃຫຍ່" ແລະ ສິ່ງນີ້ກໍ່ໃຫ້ເກີດຄວາມລຶກລັບທີ່ເຮົາບໍ່ເຄີຍເປີດເຜີຍໃຫ້ແກ່ມະນຸດຊາດ. ຜູ້ຄົນຄິດວ່າ ຕົ້ນໝາກເດື່ອອາດຈະເປັນຕົ້ນໄມ້ຊະນິດດີຂອງຕົ້ນໄມ້ກິນໝາກ ຫຼື ບາງເທື່ອ ເມື່ອວິເຄາະເລິກລົງໄປອີກໜຶ່ງບາດກ້າວ ມັນໝາຍເຖິງໄພ່ພົນ, ເຖິງຢ່າງໃດກໍຕາມ ພວກເຂົາກໍຍັງຢູ່ຫ່າງໄກຈາກຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ຫຼາຍ. ເຮົາຈະບອກມັນໃຫ້ກັບພວກເຈົ້າເມື່ອເຮົາເປີດໜັງສືມ້ວນຂອງເຮົາໃນຍຸກສຸດທ້າຍ. ("ໜັງສືມ້ວນ" ໝາຍເຖິງພຣະທຳທຸກຂໍ້ທີ່ເຮົາໄດ້ກ່າວ ນັ້ນກໍຄື ພຣະທຳຂອງເຮົາທີ່ຢູ່ໃນຍຸກສຸດທ້າຍ; ມັນມີພຣະທຳທຸກຢ່າງ). "ຕົ້ນໝາກເດື່ອ" ໝາຍເຖິງບົດບັນຍັດການປົກຄອງຂອງເຮົາ ນັ້ນກໍຄື ບົດບັນຍັດການປົກຄອງທຸກຂໍ້. ແຕ່ນີ້ເປັນພຽງສ່ວນໜຶ່ງຂອງສິ່ງທີ່ມັນໝາຍເຖິງ. ການແຕກໜໍ່ຂອງຕົ້ນໝາກເດື່ອໝາຍເຖິງການທີ່ເຮົາເລີ່ມຕົ້ນປະຕິບັດ

ພາລະກິດ ແລະ ກ່າວດ້ວຍເນື້ອໜັງ, ແຕ່ບົດບັນຍັດການປົກຄອງຂອງເຮົາຍັງບໍ່ໄດ້ເປັນທີ່ຮູ້ຈັກເທື່ອ (ແລະ ນີ້ກໍຍ້ອນວ່າ ໃນເວລານັ້ນ ພະຍານສຳລັບນາມຂອງເຮົາຍັງບໍ່ທັນໄດ້ເກີດເທື່ອ ແລະ ບໍ່ມີຜູ້ໃດຮູ້ຈັກເຖິງບົດບັນຍັດການປົກຄອງຂອງເຮົາ). ເມື່ອນາມຂອງເຮົາໄດ້ຮັບການເປັນພະຍານ ແລະ ຖືກເຜີຍແຜ່, ເມື່ອມັນໄດ້ຮັບການສັນລະເສີນຈາກທຸກຄົນ ແລະ ເມື່ອບົດບັນຍັດການປົກຄອງຂອງເຮົາບັນລຸຜົນ, ນັ້ນຈະເປັນເວລາທີ່ຕົ້ນໝາກເດື່ອອອກໝາກ. ນີ້ແມ່ນການອະທິບາຍຢ່າງຄົບຖ້ວນ ໂດຍບໍ່ມີຫຍັງລະເລີຍໄປ; ທຸກສິ່ງແມ່ນຖືກເປີດເຜີຍໃນທີ່ນີ້. (ເຮົາເວົ້າສິ່ງນີ້ ເພາະໃນພຣະທຳກ່ອນໜ້ານີ້ຂອງເຮົາ ມີສ່ວນໜຶ່ງທີ່ເຮົາຍັງບໍ່ທັນໄດ້ເປີດເຜີຍຢ່າງສົມບູນເທື່ອ; ສະນັ້ນ ພວກເຈົ້າຈຶ່ງຈຳເປັນຕ້ອງລໍຖ້າ ແລະ ສະແຫວງຫາຢ່າງອົດທົນ).

ເມື່ອເຮົາເຮັດໃຫ້ລູກຊາຍກົກສົມບູນ, ເຮົາຈະເປີດເຜີຍສະຫງ່າລາສີຂອງເຮົາຢ່າງສົມບູນ ແລະການປາກົດຕົວຢ່າງຄົບຖ້ວນຂອງເຮົາຕໍ່ໂລກຈັກກະວານ. ສິ່ງນີ້ຈະເກີດຂຶ້ນໃນຮ່າງກາຍ ແລະ ມັນຈະຢູ່ເໜືອທຸກຄົນ, ໃນຕົວຕົນຂອງເຮົາເອງ; ມັນຈະຢູ່ເທິງພູຊີໂອນຂອງເຮົາ ແລະ ໃນສະຫງ່າລາສີຂອງເຮົາ ແລະ ໂດຍສະເພາະແລ້ວ ມັນຈະເກີດຂຶ້ນໃນທ່າມກາງສຽງຮ້ອງໂຮ່ແຫ່ງການສັນລະເສີນ. ຍິ່ງໄປກວ່ານັ້ນ ສັດຕູຂອງເຮົາຈະຖອຍຈາກບໍລິເວນອ້ອມຂ້າງເຮົາ, ລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ ແລະ ທະເລສາບແຫ່ງໄຟ ແລະ ມາດ. ສິ່ງທີ່ຜູ້ຄົນໃນມື້ນີ້ສາມາດຈິນຕະນາການໄດ້ແມ່ນມີຈຳກັດ ແລະ ບໍ່ສອດຄ່ອງກັບເຈດຕະນາເດີມຂອງເຮົາ; ນີ້ຄືເຫດຜົນທີ່ເຮົາແນໃສ່ແນວຄິດ ແລະ ຄວາມຄິດຂອງຜູ້ຄົນໃນທຸກມື້ທີ່ເຮົາເວົ້າ. ມື້ທີ່ສິ່ງທີ່ເຮົາເວົ້າຈະສອດຄ່ອງກັບພວກເຈົ້າໄດ້ຢ່າງສິ້ນເຊີງຈະມາເຖິງ (ມື້ທີ່ເຂົ້າສູ່ຮ່າງກາຍ) ແລະ ພວກເຈົ້າຈະບໍ່ຕໍ່ຕ້ານອີກບໍ່ວ່າຫຍັງກໍຕາມ. ໃນເວລານັ້ນ ພວກເຈົ້າຈະບໍ່ມີຄວາມຄິດຂອງພວກເຈົ້າອີກຕໍ່ໄປ ແລະ ຫຼັງຈາກນັ້ນ ເຮົາຈະເຊົາກ່າວພຣະຄຳ. ໃນຂະນະທີ່ພວກເຈົ້າບໍ່ມີຄວາມຄິດຂອງພວກເຈົ້າເອງອີກຕໍ່ໄປ, ເຮົາຈະພຽງແຕ່ສ່ອງແສງສະຫວ່າງໃຫ້ແກ່ພວກເຈົ້າໂດຍກົງ, ສິ່ງນີ້ແມ່ນພອນທີ່ຈະໄດ້ຮັບໂດຍລູກຊາຍກົກ ແລະ ມັນຈະເກີດຂຶ້ນ ເມື່ອພວກເຂົາປົກຄອງຄຽງຂ້າງເຮົາດັ່ງກະສັດ. ມະນຸດບໍ່ເຊື່ອໃນສິ່ງທີ່ພວກເຂົາບໍ່ສາມາດຈິນຕະນາການໄດ້ ແລະ ເຖິງແມ່ນວ່າມີບາງຄົນທີ່ເຊື່ອ, ພວກເຂົາກໍພຽງແຕ່ເຊື່ອ ເນື່ອງຈາກໄດ້ຮັບການສ່ອງແສງສະຫວ່າງໂດຍເຮົາ. ບໍ່ດັ່ງນັ້ນກໍຈະບໍ່ມີຜູ້ໃດເຊື່ອ ແລະ ນີ້ເປັນສິ່ງທີ່ຕ້ອງໄດ້ປະສົບ. (ຫາກບໍ່ໄດ້ຜ່ານບາດກ້າວນີ້, ລິດອຳນາດທີ່ຍິ່ງໃຫຍ່ຂອງເຮົາຈະບໍ່ສາມາດຖືກເປີດເຜີຍໄດ້ ແລະ ນີ້ກໍໝາຍຄວາມວ່າ ຜ່ານການກ່າວພຣະທຳຂອງເຮົາເທົ່ານັ້ນເຮົາຈຶ່ງກຳຈັດແນວຄິດຂອງຜູ້ຄົນອອກຈາກຕົວພວກເຂົາ. ບໍ່ມີຜູ້ໃດອີກແລ້ວທີ່ສາມາດປະຕິບັດພາລະກິດນີ້ໄດ້ ແລະ ບໍ່ມີຜູ້ໃດສາມາດແທນເຮົາໄດ້. ເຮົາເປັນຜູ້ດຽວທີ່ສາມາດເຮັດໃຫ້ມັນສຳເລັດໄດ້; ເຖິງຢ່າງໃດກໍຕາມ ສິ່ງນັ້ນກໍບໍ່ໄດ້ຄົບຖ້ວນ. ເຮົາຕ້ອງປະຕິບັດພາລະກິດນີ້ຜ່ານມະນຸດຊາດ). ຜູ້ຄົນຮູ້ສຶກໄດ້ຮັບພະລັງ ຫຼັງຈາກທີ່ໄດ້ຍິນພຣະທຳຂອງເຮົາ, ແຕ່ໃນທີ່ສຸດແລ້ວ ພວກເຂົາທຸກຄົນກໍຖອຍອອກ. ພວກເຂົາບໍ່ສາມາດເຮັດຫຍັງໄດ້ ນອກຈາກຖອຍອອກ. ໃນຂະນະດຽວກັນນັ້ນໄດ້ມີຄວາມລຶກລັບທີ່ມະນຸດບໍ່ສາມາດເຂົ້າໃຈໄດ້. ບໍ່ມີຜູ້ໃດສາມາດຈິນຕະນາການເຖິງສິ່ງທີ່ຈະເກີດຂຶ້ນ ແລະ ເຮົາຈະອະນຸຍາດໃຫ້ພວກເຈົ້າໄດ້ເຫັນສິ່ງນີ້ໃນສິ່ງທີ່ເຮົາເປີດເຜີຍ. ຜ່ານສິ່ງນັ້ນ ຄວາມໝາຍທີ່ແທ້ຈິງຂອງ

ພຣະທຳເຫຼົ່ານີ້ຂອງເຮົາຈະຊັດແຈ້ງ: “ເຮົາຈະຖອນຮາກທຸກຄົນທີ່ບໍ່ເໝາະສົມໃຫ້ເຮົານຳໃຊ້”. ລູກຊາຍກົກຂອງເຮົາມີການສະແດງອອກທີ່ຫຼາກຫຼາຍ ເຊັ່ນດຽວກັບສັດຕູຂອງເຮົາ. ພວກເຂົາທຸກຄົນຈະຖືກເປີດເຜີຍແກ່ພວກເຈົ້າເທື່ອລະຄົນ. ໃຫ້ຈື່ໄວ້! ຜູ້ໃດກໍຕາມນອກຈາກລູກຊາຍກົກແມ່ນມີພາລະກິດຂອງວິນຍານຊົ່ວຮ້າຍ; ພວກເຂົາທຸກຄົນເປັນລູກນ້ອງຂອງຊາຕານ. (ໃນອີກບໍ່ດົນ ພວກເຂົາກໍຈະຖືກເປີດເຜີຍເທື່ອລະຄົນ, ແຕ່ມີບາງຄົນທີ່ຈຳເປັນຕ້ອງໃຫ້ບໍລິການຈົນເຖິງທີ່ສຸດ ແລະ ມີຄົນອື່ນອີກທີ່ພຽງແຕ່ຈຳເປັນຕ້ອງໃຫ້ບໍລິການໃນຊ່ວງເວລາໃດໜຶ່ງ). ພາຍໃຕ້ພາລະກິດແຫ່ງພຣະທຳຂອງເຮົາ, ທຸກຄົນຈະສະແດງຮູບຮ່າງທີ່ແທ້ຈິງຂອງພວກເຂົາອອກມາ.

ທຸກຊົນຊາດ, ທຸກຫົນແຫ່ງ ແລະ ທຸກນິກາຍໄດ້ຮັບຄວາມຮັ່ງມີຈາກນາມຂອງເຮົາ. ເພາະໄພພິບັດກຳລັງກໍ່ຕົວໃນປັດຈຸບັນ ແລະ ຢູ່ພາຍໃນກຳມືຂອງເຮົາ ແລະ ເຮົາກຳລັງກຽມເຮັດໃຫ້ມັນຖອກເຫລົງມາເທື່ອລະໜ້ອຍ, ທຸກຄົນກຳລັງສະແຫວງຫາຫົນທາງທີ່ແທ້ຈິງຢ່າງຮີບດ່ວນ ເຊິ່ງຕ້ອງໄດ້ສະແຫວງຫາ ເຖິງແມ່ນວ່າລາຄາຂອງການສະແຫວງນັ້ນຄືການຍອມສະຫຼະທຸກສິ່ງ. ໃນທຸກສິ່ງ ເຮົາມີເວລາຂອງເຮົາເອງ. ເມື່ອໃດກໍຕາມທີ່ເຮົາເວົ້າວ່າ ມັນຈະສຳເລັດ, ມັນກໍຈະສຳເລັດທັນທີໃນຕອນນັ້ນ, ໃນນາທີນັ້ນ ແລະ ແມ່ນແຕ່ໃນວິນາທີນັ້ນ. ບໍ່ມີຜູ້ໃດສາມາດຂັດຂວາງມັນ ຫຼື ຢຸດມັນໄດ້. ໃນທີ່ສຸດແລ້ວ ມັງກອນແດງຜູ້ຍິ່ງໃຫຍ່ແມ່ນສັດຕູຂອງເຮົາທີ່ຖືກປາບ; ມັນແມ່ນຜູ້ໃຫ້ບໍລິການແກ່ເຮົາ ແລະ ມັນເຮັດແມ່ນຫຍັງກໍຕາມທີ່ເຮົາບອກໃຫ້ມັນເຮັດ ໂດຍບໍ່ຕໍ່ຕ້ານແມ່ນແຕ່ໜ້ອຍດຽວ. ມັນຄືສັດທີ່ແບກຫາບຂອງເຮົາແທ້ໆ. ເມື່ອພາລະກິດຂອງເຮົາໄດ້ສຳເລັດລົງ, ເຮົາຈະໂຍນມັນລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ ແລະ ລົງສູ່ທະເລສາບແຫ່ງໄຟ ແລະ ມາດ (ເຮົາກຳລັງໝາຍເຖິງຄົນທີ່ຖືກທຳລາຍ). ຄົນທີ່ຖືກທຳລາຍຈະບໍ່ພຽງແຕ່ຊີມລົດຊາດແຫ່ງຄວາມຕາຍ, ແຕ່ພວກເຂົາຍັງຈະຖືກລົງໂທດຢ່າງຮຸນແຮງຍ້ອນພວກເຂົາຂົ່ມເຫັງເຮົາ. ນີ້ແມ່ນພາລະກິດທີ່ເຮົາຈະສືບຕໍ່ປະຕິບັດຜ່ານທາງຜູ້ໃຫ້ບໍລິການ. ເຮົາຈະເຮັດໃຫ້ຊາຕານສັງຫານ ແລະ ທຳລາຍຕົວມັນເອງ, ທຳລາຍລ້າງເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ຢ່າງສົມບູນ. ນີ້ແມ່ນສ່ວນໜຶ່ງຂອງພາລະກິດຂອງເຮົາ; ຫຼັງຈາກນັ້ນ ເຮົາຈະຫັນໄປຫາຊົນຊາດຕ່າງຊາດ. ສິ່ງເຫຼົ່ານີ້ແມ່ນບາດກ້າວໃນພາລະກິດຂອງເຮົາ.

# ບົດທີ 111

ທຸກຊົນຊາດຈະໄດ້ຮັບພອນຍ້ອນພຣະອົງຢ່າງແນ່ນອນ; ທຸກຄົນຈະໂຮ່ຮ້ອງ ແລະ ສັນລະເສີນເຮົາຍ້ອນພຣະອົງ. ອານາຈັກຂອງເຮົາຈະຮຸ່ງເຮືອງ ແລະ ພັດທະນາ ແລະ ຈະຄົງຢູ່ຕະຫຼອດໄປ. ບໍ່ມີຜູ້ໃດຈະໄດ້ຮັບອະນຸຍາດໃຫ້ຢຽບຢໍ່າມັນ ແລະ ບໍ່ມີຫຍັງຈະໄດ້ຮັບອະນຸຍາດໃຫ້ເປັນຢູ່ໂດຍບໍ່ສອດຄ່ອງກັບເຮົາ ຍ້ອນເຮົາເປັນພຣະເຈົ້າທີ່ສະຫງ່າຜ່າເຜີຍ ຜູ້ທີ່ບໍ່ອົດທົນຕໍ່ການເຮັດຜິດ. ເຮົາບໍ່ອະນຸຍາດໃຫ້ຜູ້ຄົນຕັດສິນເຮົາ ແລະ ເຮົາບໍ່ອະນຸຍາດໃຫ້ຜູ້ໃດກໍຕາມບໍ່ສາມາດເຂົ້າກັນໄດ້ກັບເຮົາ. ສິ່ງນີ້ກໍພຽງພໍທີ່ຈະສະແດງອຸປະນິໄສຂອງເຮົາ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາ. ເມື່ອຜູ້ໃດກໍຕາມຕໍ່ຕ້ານເຮົາ ເຮົາຈະລົງໂທດເຂົາໃນເວລາຂອງເຮົາເອງ. ເປັນຫຍັງຈຶ່ງບໍ່ມີຜູ້ໃດເຫັນເຮົາລົງໂທດຜູ້ໃດຜູ້ໜຶ່ງ? ມັນເປັນພຽງແຕ່ເພາະເວລາຂອງເຮົາຍັງບໍ່ທັນໄດ້ມາເຖິງ ແລະ ມືຂອງເຮົາຍັງບໍ່ທັນໄດ້ລົງມືຢ່າງແທ້ຈິງ. ເຖິງແມ່ນໄພພິບັດອັນໃຫຍ່ຫຼວງໄດ້ຖອກເທລົງມາ, ສິ່ງນີ້ກໍປະກອບມີພຽງແຕ່ການເວົ້າເຖິງວ່າ ໄພພິບັດອັນໃຫຍ່ຫຼວງກໍ່ໃຫ້ເກີດຫຍັງ ໃນຂະນະທີ່ຄວາມເປັນຈິງຂອງໄພພິບັດອັນໃຫຍ່ຫຼວງບໍ່ໄດ້ເກີດຂຶ້ນກັບມະນຸດຄົນໃດ. ພວກເຈົ້າເຂົ້າໃຈຫຍັງແນ່ບໍຈາກພຣະທຳຂອງເຮົາ? ມື້ນີ້ ເຮົາຈະເລີ່ມປົດປ່ອຍຄວາມເປັນຈິງແຫ່ງໄພພິບັດອັນໃຫຍ່ຫຼວງ. ຫຼັງຈາກນີ້ ຜູ້ໃດກໍຕາມທີ່ຕໍ່ຕ້ານເຮົາກໍຈະຖືກມືຂອງເຮົາໂຈມຕີໃຫ້ລົ້ມລົງ. ໃນອະດີດ ເຮົາພຽງແຕ່ເຮັດເພື່ອເປີດໂປງສອງສາມຄົນ; ໄພພິບັດອັນໃຫຍ່ຫຼວງຍັງບໍ່ທັນໄດ້ມາເຖິງເທື່ອ. ປັດຈຸບັນແມ່ນແຕກຕ່າງຈາກອະດີດ. ຍ້ອນເຮົາໄດ້ບອກພວກເຈົ້າທຸກສິ່ງກ່ຽວກັບວ່າໄພພິບັດອັນໃຫຍ່ຫຼວງຈະກໍ່ໃຫ້ເກີດຫຍັງ, ເຮົາຈະປະກາດຕໍ່ສາທາລະນະໃນເວລາທີ່ກຳນົດເຖິງຄວາມເປັນຈິງແຫ່ງໄພພິບັດອັນໃຫຍ່ຫຼວງ. ກ່ອນໜ້ານີ້ ບໍ່ມີຜູ້ໃດຖືກແຕະຕ້ອງໂດຍໄພພິບັດອັນໃຫຍ່ຫຼວງ, ສະນັ້ນ ຄົນສ່ວນໃຫຍ່ (ນັ້ນກໍຄື ລູກຊາຍຂອງມັງກອນແດງຜູ້ຍິ່ງໃຫຍ່) ຈຶ່ງສືບຕໍ່ເຮັດຢ່າງປະໝາດ ແລະ ຕາມອຳເພີໃຈ. ເມື່ອຄວາມເປັນຈິງມາເຖິງ, ສິ່ງຖືກສ້າງທີ່ໜ້າເວດທະນາເຫຼົ່ານີ້ກໍຈະໄດ້ເຊື່ອຢ່າງສົມບູນ. ບໍ່ດັ່ງນັ້ນ ທຸກຄົນຈະບໍ່ແນ່ໃຈກ່ຽວກັບເຮົາ ແລະ ບໍ່ມີຜູ້ໃດຈະຊັດເຈນກ່ຽວກັບເຮົາ. ນີ້ແມ່ນບົດບັນຍັດການປົກຄອງຂອງເຮົາ. ຈາກນີ້ ມັນສາມາດເຫັນໄດ້ວ່າ ວິທີການປະຕິບັດພາລະກິດຂອງເຮົາ (ໝາຍເຖິງວິທີການປະຕິບັດພາລະກິດຂອງເຮົາໃນທຸກຄົນ) ໄດ້ເລີ່ມປ່ຽນໄປ: ເຮົາກຳລັງສະແດງຄວາມໂກດຮ້າຍຂອງເຮົາ, ການພິພາກສາຂອງເຮົາ ແລະ ການສາບແຊ່ງຂອງເຮົາຜ່ານເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ມືຂອງເຮົາໄດ້ເລີ່ມຕົ້ນຂ້ຽນຕີທຸກຄົນທີ່ຕໍ່ຕ້ານເຮົາ. ເຮົາກຳລັງສະແດງຄວາມເມດຕາຂອງເຮົາ ແລະ ຄວາມຮັກຄວາມເມດຕາຂອງເຮົາຜ່ານລູກຊາຍກົກ. ຍິ່ງໄປກວ່ານັ້ນອີກ ຜ່ານລູກຊາຍກົກ ເຮົາກຳລັງສະແດງອຸປະນິໄສທີ່ບໍລິສຸດຂອງເຮົາ ເຊິ່ງບໍ່ອົດທົນຕໍ່ການເຮັດຜິດ; ເຮົາກຳລັງສະແດງສິດອຳນາດຂອງເຮົາ ແລະ ເຮົາກຳລັງສະແດງຕົວຕົນຂອງເຮົາ. ຜູ້ໃຫ້ບໍລິການໄດ້ຕັ້ງຫຼັກທີ່ຈະໃຫ້ບໍລິການແກ່ເຮົາ ແລະ ລູກຊາຍກົກຂອງເຮົາກຳລັງເປັນທີ່ຮູ້ຈັກຫຼາຍຂຶ້ນເລື້ອຍໆ. ໂດຍການໂຈມຕີຄົນເຫຼົ່ານັ້ນທີ່ຕໍ່ຕ້ານເຮົາໃຫ້ລົ້ມລົງ, ເຮົາປ່ອຍໃຫ້ຜູ້ໃຫ້ບໍລິການໄດ້ເຫັນເຖິງມືທີ່ໄຮ້ຄວາມປານີຂອງເຮົາ ເພື່ອວ່າພວກເຂົາຈະໃຫ້ບໍລິການແກ່ເຮົາດ້ວຍຄວາມຢ້ານກົວ ແລະ ຕົວສັ່ນ. ອີກຢ່າງ ເຮົາປ່ອຍໃຫ້

ລູກຊາຍກົກຂອງເຮົາໄດ້ເຫັນເຖິງສິດອຳນາດຂອງເຮົາ ແລະ ເຂົ້າໃຈເຮົາໄດ້ດີຍິ່ງຂຶ້ນເພື່ອວ່າພວກເຂົາຈະເຕີບໃຫຍ່ໃນຊີວິດ. ພຣະທຳທີ່ເຮົາກ່າວໃນຊ່ວງເວລາທີ່ຜ່ານມາ (ເຊິ່ງລວມເຖິງບົດບັນຍັດການປົກຄອງ, ການທຳນາຍ ແລະ ການພິພາກສາຄົນທຸກປະເພດ) ແມ່ນເລີ່ມຕົ້ນເປັນຈິງຕາມລຳດັບ; ນັ້ນກໍຄື ຜູ້ຄົນຈະເຫັນວ່າພຣະທຳຂອງເຮົາເປັນຈິງຕໍ່ຕາຂອງພວກເຂົາ, ເຫັນວ່າບໍ່ມີຂໍ້ໃດໃນພຣະທຳຂອງເຮົາທີ່ໄຮ້ໝາກຜົນ, ແຕ່ພຣະທຳທຸກຂໍ້ແມ່ນເປັນຈິງ. ກ່ອນທີ່ພຣະທຳຂອງເຮົາຈະເປັນຈິງ, ຫຼາຍຄົນຈະຈາກໄປ ເພາະພວກເຂົາບໍ່ໄດ້ສົມຫວັງ. ນີ້ແມ່ນວິທີທີ່ເຮົາປະຕິບັດພາລະກິດ ນັ້ນກໍຄື ມັນບໍ່ແມ່ນພຽງໜ້າທີ່ຂອງທ່ອນເຫຼັກຂອງເຮົາເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນອີກ ມັນຄືສະຕິປັນຍາແຫ່ງພຣະທຳຂອງເຮົາ. ຈາກສິ່ງເຫຼົ່ານີ້ ຄົນໃດໜຶ່ງສາມາດເຫັນໄດ້ເຖິງອຳນາດອັນໄພສານຂອງເຮົາ ແລະ ຄວາມກຽດຊັງຂອງເຮົາສຳລັບມັງກອນແດງຜູ້ຍິ່ງໃຫຍ່. (ສິ່ງນີ້ສາມາດເຫັນໄດ້ຫຼັງຈາກທີ່ເຮົາໄດ້ເລີ່ມຕົ້ນພາລະກິດຂອງເຮົາເທົ່ານັ້ນ. ບັດນີ້ ບາງຄົນກໍໄດ້ຖືກເປີດເຜີຍ ນັ້ນກໍຄື ມັນເປັນພຽງແຕ່ສ່ວນເລັກນ້ອຍໃນການຂ້ຽນຕີຂອງເຮົາ, ແຕ່ມັນບໍ່ສາມາດຖືກລວມໄວ້ໃນໄພພິບັດອັນໃຫຍ່ຫຼວງໄດ້. ສິ່ງນີ້ບໍ່ໄດ້ເຂົ້າໃຈຍາກ. ສະນັ້ນມັນສາມາດເຫັນໄດ້ວ່າ ແຕ່ນີ້ໄປ ວິທີການປະຕິບັດພາລະກິດຂອງເຮົາຍິ່ງຈະເຂົ້າໃຈໄດ້ຍາກຂຶ້ນສຳລັບຜູ້ຄົນ. ມື້ນີ້ ເຮົາກຳລັງບອກພວກເຈົ້າ ເພື່ອວ່າພວກເຈົ້າຈະບໍ່ອ່ອນແອຍ້ອນສິ່ງນີ້ເມື່ອເວລາມາເຖິງ. ນີ້ແມ່ນສິ່ງທີ່ເຮົາກຳລັງຝາກຝັງໃຫ້ກັບພວກເຈົ້າ, ເພາະສິ່ງຕ່າງໆຈະເກີດຂຶ້ນ ເຊິ່ງຜູ້ຄົນບໍ່ເຄີຍເຫັນມາກ່ອນຕັ້ງແຕ່ດຶກດຳບັນ ແລະ ສິ່ງຕ່າງໆຈະເຮັດໃຫ້ມັນຍາກຂຶ້ນສຳລັບຜູ້ຄົນທີ່ຈະປ່ອຍວາງຄວາມຮູ້ສຶກຂອງພວກເຂົາ ແລະ ຄວາມຄິດວ່າຕົນເອງຊອບທຳຂອງພວກເຂົາ). ເຫດຜົນທີ່ເຮົາໃຊ້ວິທີການທີ່ແຕກຕ່າງກັນເພື່ອລົງໂທດມັງກອນແດງຜູ້ຍິ່ງໃຫຍ່ກໍເປັນເພາະມັນເປັນສັດຕູຂອງເຮົາ ແລະ ຄູ່ປໍລະປັກຂອງເຮົາ. ເຮົາຕ້ອງທຳລາຍເຊື້ອສາຍຂອງມັນທັງໝົດ, ເມື່ອນັ້ນເທົ່ານັ້ນເຮົາຈຶ່ງສາມາດກຳຈັດຄວາມກຽດຊັງອອກຈາກຫົວໃຈຂອງເຮົາ ແລະ ມີພຽງແຕ່ເມື່ອນັ້ນ ເຮົາຈຶ່ງສາມາດເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ອັບອາຍຢ່າງເໝາະສົມ. ມີພຽງແຕ່ສິ່ງນີ້ເທົ່ານັ້ນທີ່ເປັນການທຳລາຍມັງກອນແດງຜູ້ຍິ່ງໃຫຍ່ ແລະ ໂຍນມັນລົງສູ່ທະເລສາບແຫ່ງໄຟ ແລະ ມາດ, ລົງສູ່ຂຸມເລິກທີ່ບໍ່ສິ້ນສຸດ.

ມັນບໍ່ແມ່ນພຽງແຕ່ມື້ວານເທົ່ານັ້ນທີ່ເຮົາປ່ອຍໃຫ້ລູກຊາຍກົກຂອງເຮົາປົກຄອງກັບເຮົາ ແລະຮ່ວມກັບເຮົາໃນການປົກຄອງທຸກຊົນຊາດ ແລະ ໃນການຊື່ນຊົມພອນຕ່າງໆ; ເຮົາຍັງເຮັດແບບນັ້ນໃນມື້ນີ້ ແລະ ທີ່ສຳຄັນໄປກວ່ານັ້ນຄື ເຮົາຍັງຈະເຮັດໃຫ້ແບບດຽວກັນໃນມື້ອື່ນ. ເຮົາໄດ້ປະສົບຜົນສຳເລັດໃນພາລະກິດຂອງເຮົາ, ເຮົາໄດ້ເວົ້າແບບນີ້ຕະຫຼອດມາ ແລະ ມັນສາມາດເວົ້າໄດ້ວ່າ ເຮົາເລີ່ມຕົ້ນເວົ້າແບບນີ້ນັບຕັ້ງແຕ່ເວລາເລີ່ມຕົ້ນຂອງການເນລະມິດສ້າງ, ແຕ່ມະນຸດບໍ່ເຂົ້າໃຈໃນສິ່ງທີ່ເຮົາກຳລັງເວົ້າ. ນັບຕັ້ງແຕ່ເວລາແຫ່ງການເນລະມິດສ້າງຈົນເຖິງປັດຈຸບັນ, ເຮົາບໍ່ໄດ້ປະຕິບັດພາລະກິດເປັນການສ່ວນຕົວ; ເວົ້າອີກຢ່າງກໍຄື ພຣະວິນຍານຂອງເຮົາບໍ່ເຄີຍລົງມາສູ່ມະນຸດຢ່າງສົມບູນເພື່ອກ່າວ ແລະປະຕິບັດພາລະກິດ. ແຕ່ມື້ນີ້ແມ່ນແຕກຕ່າງຈາກອະດີດ: ພຣະວິນຍານຂອງເຮົາກຳລັງປະຕິບັດພາລະກິດເປັນການສ່ວນຕົວໃນທຸກຫົນແຫ່ງໃນໂລກຈັກກະວານ. ເພາະໃນຍຸກສຸດທ້າຍ ເຮົາຕ້ອງການຮັບເອົາຄົນກຸ່ມໜຶ່ງທີ່ຈະປົກຄອງດ້ວຍອຳນາດຮ່ວມກັບເຮົາ, ເຮົາໄດ້ຮັບບຸກຄົນທີ່ເປັນຈິດໜຶ່ງໃຈດຽວກັນກັບ

ເຮົາກ່ອນ ຜູ້ທີ່ອາດຈະຄຳນຶງເຖິງພາລະຂອງເຮົາ. ຫຼັງຈາກນັ້ນ ພຣະວິນຍານຂອງເຮົາຈະລົງມາສູ່ພຣະອົງ ຢ່າງສົມບູນເພື່ອກ່າວສຽງຂອງເຮົາ ແລະ ປ່ອຍບົດບັນຍັດການປົກຄອງຂອງເຮົາ ແລະ ເປີດເຜີຍຄວາມ ລຶກລັບຂອງເຮົາຕໍ່ໂລກຈັກກະວານ. ພຣະວິນຍານຂອງເຮົາຈະເຮັດໃຫ້ພຣະອົງສົມບູນເປັນການສ່ວນຕົວ; ພຣະວິນຍານຂອງເຮົາຈະລົງວິໄນພຣະອົງເປັນການສ່ວນຕົວ. ເພາະພຣະອົງດຳລົງຊີວິດຢູ່ໃນຄວາມເປັນ ມະນຸດທີ່ປົກກະຕິ, ບໍ່ມີຜູ້ໃດສາມາດເຫັນໄດ້ຢ່າງຊັດເຈນ. ເມື່ອລູກຊາຍກົກຂອງເຮົາເຂົ້າສູ່ຮ່າງກາຍ, ມັນກໍຈະຊັດເຈນຢ່າງສິ້ນເຊີງວ່າ ສິ່ງທີ່ເຮົາເຮັດໃນຕອນນີ້ເປັນຄວາມຈິງ ຫຼື ບໍ່. ແນ່ນອນ ໃນສາຍຕາ ຂອງມະນຸດ, ໃນແນວຄິດຂອງມະນຸດ, ບໍ່ມີຜູ້ໃດເຊື່ອ ແລະ ບໍ່ມີຜູ້ໃດສາມາດເຊື່ອຟັງໄດ້. ແຕ່ນັ້ນແມ່ນ ການທີ່ເຮົາອົດທົນກັບຜູ້ຄົນ. ເພາະຄວາມເປັນຈິງຍັງບໍ່ທັນໄດ້ມາເຖິງ, ສະນັ້ນ ຜູ້ຄົນຈຶ່ງບໍ່ສາມາດເຊື່ອ ຫຼື ເຂົ້າໃຈໄດ້. ບໍ່ເຄີຍມີຜູ້ໃດທີ່ຈະເຊື່ອພຣະທຳຂອງເຮົາທ່າມກາງແນວຄິດແບບມະນຸດຂອງພວກເຂົາ. ທຸກຄົນເປັນແບບນີ້ໝົດ: ບໍ່ວ່າພວກເຂົາພຽງແຕ່ເຊື່ອໃນສິ່ງທີ່ຕົວຕົນເນື້ອໜັງຂອງເຮົາກ່າວ ຫຼື ພວກເຂົາພຽງແຕ່ເຊື່ອໃນສຽງຂອງພຣະວິນຍານຂອງເຮົາ. ນີ້ແມ່ນສິ່ງທີ່ຍາກທີ່ສຸດທີ່ຈະຈັດການໃນ ຜູ້ຄົນ. ຖ້າພວກເຂົາບໍ່ໄດ້ເຫັນສິ່ງທີ່ເກີດຂຶ້ນດ້ວຍຕາຂອງພວກເຂົາເອງ, ບໍ່ມີຜູ້ໃດສາມາດປະຖິ້ມ ແນວຄິດຂອງພວກເຂົາເອງໄດ້ ແລະ ບໍ່ມີຜູ້ໃດສາມາດເຊື່ອໃນສິ່ງທີ່ເຮົາເວົ້າໄດ້. ນັ້ນຄືເຫດຜົນທີ່ເຮົາ ໃຊ້ບົດບັນຍັດການປົກຄອງຂອງເຮົາເພື່ອລົງໂທດລູກຊາຍແຫ່ງຄວາມບໍ່ເຊື່ອຟັງເຫຼົ່ານັ້ນ.

ເຮົາໄດ້ເວົ້າສິ່ງດັ່ງກ່າວໃນເມື່ອກ່ອນວ່າ: ເຮົາເປັນຜູ້ທຳອິດ ແລະ ຜູ້ສຸດທ້າຍ ແລະ ເຮົາເປັນຜູ້ທີ່ ຄວບຄຸມທຸກສິ່ງ ນັບຕັ້ງແຕ່ຈຸດເລີ່ມຕົ້ນຈົນເຖິງຈຸດຈົບ. ໃນຍຸກສຸດທ້າຍ ເຮົາຈະຮັບເອົາລູກໆຜູ້ຊາຍທີ່ ມີໄຊຊະນະ 144.000 ຄົນ. ພວກເຈົ້າມີຄວາມເຂົ້າໃຈບາງຢ່າງຕາມຕົວອັກສອນກ່ຽວກັບພຣະທຳ ເຫຼົ່ານີ້ ນັ້ນກໍຄື "ລູກໆຜູ້ຊາຍທີ່ມີໄຊຊະນະ" ແຕ່ພວກເຈົ້າບໍ່ຊັດເຈນກ່ຽວກັບຕົວເລກ 144.000. ໃນ ແນວຄິດຂອງມະນຸດ, ຕົວເລກຕ້ອງໝາຍເຖິງຈຳນວນຂອງຜູ້ຄົນ ຫຼື ຈຳນວນຂອງສິ່ງຕ່າງໆ. ກ່ຽວກັບ "144.000" ທີ່ຂະຫຍາຍໃຫ້ກັບ "ລູກໆຜູ້ຊາຍທີ່ມີໄຊຊະນະ" ນັ້ນກໍຄື "ລູກໆຜູ້ຊາຍທີ່ມີໄຊຊະນະ 144.000 ຄົນ", ຜູ້ຄົນຄິດວ່າມີລູກໆຜູ້ຊາຍທີ່ມີໄຊຊະນະຢູ່ 144.000 ຄົນ. ຍິ່ງໄປກວ່ານັ້ນ ບາງຄົນ ຄິດວ່າມີຄວາມໝາຍຕາມສັນຍາລັກບາງຢ່າງຢູ່ພາຍໃນຂໍ້ແທ້ຈິງຂອງຕົວເລກນີ້ ແລະ ພວກເຂົາແຍກ 140.000 ແລະ 4.000 ເປັນສ່ວນທີ່ແຕກຕ່າງກັນ. ແຕ່ການຕີຄວາມໝາຍສອງຢ່າງເຫຼົ່ານີ້ແມ່ນຜິດ. ສິ່ງນີ້ບໍ່ໄດ້ໝາຍເຖິງຕົວເລກທີ່ແທ້ຈິງ ແລະ ແຮງໄກທີ່ຈະໝາຍເຖິງຄວາມໝາຍຕາມສັນຍາລັກບາງ ຢ່າງ. ທ່າມກາງມະນຸດຊາດ ບໍ່ມີຜູ້ໃດທີ່ສາມາດເຂົ້າໃຈສິ່ງນີ້ໄດ້ຢ່າງທະລຸ ນັ້ນກໍຄື ຜູ້ຄົນໃນຮຸ່ນທີ່ຜ່ານ ມາລ້ວນແລ້ວແຕ່ຄິດວ່າມັນອາດໝາຍເຖິງຄວາມໝາຍຕາມສັນຍາລັກ. ຕົວເລກ "144.000" ແມ່ນ ກ່ຽວພັນກັບລູກໆຜູ້ຊາຍທີ່ມີໄຊຊະນະ. ເມື່ອເປັນດັ່ງນັ້ນ, 144.000 ຈຶ່ງໝາຍເຖິງກຸ່ມຄົນໃນຍຸກ ສຸດທ້າຍທີ່ຈະປົກຄອງ ແລະ ຜູ້ທີ່ເຮົາຮັກ. ນັ້ນກໍຄື 144.000 ຄວນຖືກຕີຄວາມໝາຍວ່າເປັນກຸ່ມຄົນ ທີ່ມາຈາກຊີໂອນ ແລະ ຈະກັບຄືນສູ່ຊີໂອນ. ການອະທິບາຍຢ່າງຄົບຖ້ວນກ່ຽວກັບລູກໆຜູ້ຊາຍທີ່ມີໄຊ ຊະນະ 144.000 ຄົນແມ່ນເປັນດັ່ງນີ້: ພວກເຂົາເປັນຄົນທີ່ມາຈາກຊີໂອນສູ່ໂລກ ແລະ ຖືກຊາຕານ ເຮັດໃຫ້ເສື່ອມຊາມ ແລະ ເປັນພວກເຂົາທີ່ຈະຖືກເຮົາຮັບຄືນໃໝ່ໃນທີ່ສຸດ ແລະ ຈະກັບຄືນສູ່ຊີໂອນ

ກັບເຮົາ. ຈາກພຣະທຳຂອງເຮົາ ຄົນໃດໜຶ່ງສາມາດເຫັນໄດ້ເຖິງບາດກ້າວຂອງພາລະກິດຂອງເຮົາ ເຊິ່ງໝາຍຄວາມວ່າ ເວລາທີ່ພວກເຈົ້າຈະເຂົ້າສູ່ຮ່າງກາຍກໍບໍ່ໄດ້ໄກຫຼາຍ. ນັ້ນຄືເຫດຜົນທີ່ເຮົາອະທິບາຍລັກສະນະນີ້ຊໍ້າໄປຊໍ້າມາໃຫ້ແກ່ພວກເຈົ້າ ແລະ ຕັກເຕືອນພວກເຈົ້າກ່ຽວກັບມັນ. ພວກເຈົ້າຈະເຫັນຢ່າງຊັດເຈນ ແລະ ຈາກພຣະທຳຂອງເຮົາ ພວກເຈົ້າຈະຄົ້ນພົບຫົນທາງໃນການປະຕິບັດ; ຈາກພຣະທຳຂອງເຮົາ ພວກເຈົ້າຈະຄົ້ນພົບໄລຍະບາດກ້າວຂອງພາລະກິດຂອງເຮົາ. ເພື່ອທີ່ຈະຄົ້ນຫາໄລຍະບາດກ້າວຂອງພາລະກິດຂອງພຣະວິນຍານບໍລິສຸດ, ພວກເຈົ້າຕ້ອງແຍກແຍະມັນອອກຈາກຄວາມລຶກລັບທີ່ເຮົາເປີດເຜີຍໃຫ້ແກ່ພວກເຈົ້າ (ເພາະບໍ່ມີຜູ້ໃດສາມາດເຫັນ ແລະ ບໍ່ມີຜູ້ໃດສາມາດເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດໄດ້ຢ່າງທະລຸ). ນັ້ນຄືເຫດຜົນທີ່ເຮົາເປີດເຜີຍຄວາມລຶກລັບໃນຍຸກສຸດທ້າຍ.

ໃນເຮືອນຂອງເຮົາ ບໍ່ມີຫຍັງທີ່ບໍ່ສອດຄ່ອງກັບເຮົາ ແລະ ຈາກນີ້ເປັນຕົ້ນໄປ ເຮົາຈະເລີ່ມຕົ້ນກວາດລ້າງ ແລະ ຊໍາລະລ້າງເທື່ອລະເລັກເທື່ອລະໜ້ອຍ. ທ່າມກາງຜູ້ຄົນ ບໍ່ມີຜູ້ໃດສາມາດແຊກແຊງ ແລະ ບໍ່ມີຜູ້ໃດສາມາດປະຕິບັດພາລະກິດນີ້ໄດ້. ສິ່ງນີ້ເປີດເຜີຍໃຫ້ເຫັນວ່າເປັນຫຍັງເຮົາຈຶ່ງປະຕິບັດພາລະກິດເປັນການສ່ວນຕົວໃນຍຸກສຸດທ້າຍ. ແລ້ວນີ້ຄືເຫດຜົນທີ່ເຮົາໄດ້ບອກພວກເຈົ້າຫຼາຍຄັ້ງແລ້ວວ່າ ພວກເຈົ້າພຽງແຕ່ຈໍາເປັນຕ້ອງມີຄວາມສຸກກັບຕົນເອງ ແລະ ບໍ່ຈໍາເປັນຕ້ອງຫຍັບນິ້ວມື. ມັນແມ່ນຜ່ານທາງສິ່ງນີ້ທີ່ລິດອໍານາດຂອງເຮົາຖືກເປີດເຜີຍ, ທີ່ຄວາມຊອບທໍາ ແລະ ຄວາມສະຫງ່າຜ່າເຜີຍຂອງເຮົາຖືກເປີດເຜີຍ ແລະ ທີ່ຄວາມລຶກລັບທັງໝົດຂອງເຮົາເຊິ່ງຜູ້ຄົນບໍ່ສາມາດໄຂອອກໄດ້ນັ້ນຖືກເປີດເຜີຍ. (ເພາະຜູ້ຄົນບໍ່ເຄີຍມີຄວາມຮູ້ກ່ຽວກັບແຜນການຄຸ້ມຄອງຂອງເຮົາ ຫຼື ມີຄວາມເຂົ້າໃຈຫຍັງກ່ຽວກັບບາດກ້າວໃນພາລະກິດຂອງເຮົາ, ພວກມັນຈຶ່ງຖືກເອີ້ນວ່າ "ຄວາມລຶກລັບ"). ສິ່ງທີ່ເຮົາຈະຮັບເອົາ ແລະ ສິ່ງທີ່ເຮົາຈະເຮັດໃນຍຸກສຸດທ້າຍແມ່ນເປັນຄວາມລຶກລັບ. ກ່ອນເວລາທີ່ເຮົາສ້າງໂລກ, ເຮົາບໍ່ເຄີຍເຮັດສິ່ງທີ່ເຮົາເຮັດໃນມື້ນີ້ ແລະ ເຮົາບໍ່ເຄີຍສະແດງໃຫ້ຜູ້ຄົນເຫັນເຖິງໃບໜ້າທີ່ມີສະຫງ່າລາສີຂອງເຮົາ ຫຼື ສ່ວນໃດໜຶ່ງໃນຕົວຕົນຂອງເຮົາ; ມີພຽງແຕ່ພຣະວິນຍານຂອງເຮົາທີ່ປະຕິບັດພາລະກິດໃນບາງຄົນ. (ເພາະຕັ້ງແຕ່ເວລາແຫ່ງການເນລະມິດສ້າງ, ບໍ່ມີຜູ້ໃດສາມາດສໍາແດງເຖິງເຮົາ ແລະ ບໍ່ມີຜູ້ໃດສາມາດສະແດງອອກເຖິງເຮົາ, ເຮົາບໍ່ເຄີຍອະນຸຍາດໃຫ້ຜູ້ຄົນເຫັນຕົວຕົນຂອງເຮົາ ແລະ ພຣະວິນຍານຂອງເຮົາກໍໄດ້ປະຕິບັດພາລະກິດໃນບາງຄົນ). ມີພຽງແຕ່ໃນມື້ນີ້ ເຮົາຈຶ່ງໄດ້ເປີດເຜີຍພາບລັກສະນະທີ່ມີສະຫງ່າລາສີ ແລະ ຕົວຕົນຂອງເຮົາໃຫ້ແກ່ມະນຸດ ແລະ ມີແຕ່ຕອນນີ້ເທົ່ານັ້ນ ພວກເຂົາຈຶ່ງໄດ້ເຫັນສິ່ງເຫຼົ່ານີ້. ແຕ່ສິ່ງທີ່ພວກເຈົ້າໄດ້ເຫັນໃນມື້ນີ້ກໍຍັງບໍ່ຄົບຖ້ວນ ແລະ ມັນຍັງບໍ່ແມ່ນສິ່ງທີ່ເຮົາຕ້ອງການໃຫ້ພວກເຈົ້າເຫັນ. ສິ່ງທີ່ເຮົາຕ້ອງການໃຫ້ພວກເຈົ້າເຫັນແມ່ນຢູ່ໃນຮ່າງກາຍເທົ່ານັ້ນ ແລະ ໃນຕອນນີ້ ບໍ່ມີຜູ້ໃດບັນລຸເງື່ອນໄຂນີ້ເທື່ອ. ເວົ້າອີກຢ່າງໜຶ່ງກໍຄື ບໍ່ມີຜູ້ໃດສາມາດເຫັນຕົວຕົນຂອງເຮົາກ່ອນທີ່ພວກເຂົາຈະເຂົ້າສູ່ຮ່າງກາຍ. ສະນັ້ນ ເຮົາຈຶ່ງເວົ້າວ່າ ເຮົາຈະເປີດເຜີຍຕົວຕົນຂອງເຮົາຕໍ່ໂລກຈັກກະວານເທິງພູຊີໂອນ. ຈາກສິ່ງນີ້ ສາມາດເຫັນໄດ້ວ່າ ການເຂົ້າສູ່ພູຊີໂອນບໍ່ແມ່ນສ່ວນສຸດທ້າຍໃນໂຄງການຂອງເຮົາ. ໃນເວລາທີ່ເຂົ້າສູ່ພູຊີໂອນ, ອານາຈັກຂອງເຮົາຈະຖືກສ້າງຂຶ້ນຢ່າງປະສົບຜົນສໍາເລັດ. ເວົ້າອີກຢ່າງໜຶ່ງກໍຄື ຕົວຕົນຂອງເຮົາແມ່ນອານາຈັກ. ເວລາທີ່ລູກຊາຍກົກເຂົ້າສູ່ຮ່າງກາຍແມ່ນເປັນເວລາທີ່ອານາຈັກ

ຈະກາຍເປັນຈິງຢ່າງແນ່ນອນ ເຊິ່ງເປັນເຫດຜົນທີ່ເຮົາໄດ້ກ່າວເຖິງເລື່ອງທີ່ລູກຊາຍກົກເຂົ້າສູ່ພູຊີໂອນຊ້ຳໄປຊ້ຳມາ. ນີ້ແມ່ນຈຸດໃຈກາງຂອງແຜນການຄຸ້ມຄອງທັງໝົດຂອງເຮົາ ເຊິ່ງບໍ່ມີຜູ້ໃດເຄີຍເຂົ້າໃຈມາກ່ອນ.

ຫຼັງຈາກທີ່ເຮົາປ່ຽນແປງວິທີການປະຕິບັດພາລະກິດຂອງເຮົາ ມັນຈະຍິ່ງມີອີກຫຼາຍສິ່ງທີ່ຢູ່ເໜືອການຢັ່ງເຖິງຂອງຄວາມຄິດຂອງມະນຸດ, ສະນັ້ນໃຫ້ລະມັດລະວັງໃນເລື່ອງນີ້. ມີສິ່ງຕ່າງໆທີ່ຢູ່ນອກເໜືອການຢັ່ງເຖິງຂອງຄວາມຄິດຂອງມະນຸດ, ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ສິ່ງທີ່ເຮົາເວົ້ານັ້ນຜິດ. ມັນພຽງແຕ່ວ່າ ມັນຍິ່ງຈຳເປັນຫຼາຍຂຶ້ນອີກທີ່ຈະໃຫ້ຜູ້ຄົນໄດ້ທົນທຸກ ແລະ ມັນຍິ່ງຈຳເປັນຫຼາຍຂຶ້ນອີກທີ່ຈະໃຫ້ຜູ້ຄົນຮ່ວມມືກັບເຮົາ. ຢ່າເຮັດຕົວໄຮ້ສາລະໂດຍມົວເມົາໃນຕັນຫາ ແລະ ຢ່າພຽງແຕ່ປະຕິບັດຕາມແນວຄິດຂອງພວກເຈົ້າເອງເທົ່ານັ້ນ. ສຳລັບຄົນສ່ວນໃຫຍ່ທີ່ໃຫ້ບໍລິການກັບເຮົາກໍລົ້ມລົງໃນລັກສະນະນີ້. ເຮົາກຳລັງໃຊ້ພຣະທຳຂອງເຮົາເພື່ອເປີດໂປງທຳມະຊາດຂອງມະນຸດ ແລະ ເປີດເຜີຍແນວຄິດຂອງມະນຸດ. (ແຕ່ຄົນທີ່ໃຫ້ບໍລິການກັບເຮົາແມ່ນພຽງແຕ່ລົ້ມລົງ ເພາະເຮົາບໍ່ໄດ້ປ່ຽນແປງແນວຄິດຂອງພວກເຂົາ, ໃນຂະນະທີ່ເຮົາປ່ຽນແປງແນວຄິດຂອງຄົນທີ່ເປັນລູກຊາຍກົກຂອງເຮົາ ແລະກຳຈັດການຄິດຂອງພວກເຂົາຜ່ານສິ່ງນີ້). ສະນັ້ນ ໃນທີ່ສຸດແລ້ວ ລູກຊາຍກົກຂອງເຮົາຈະຖືກເຮັດໃຫ້ສົມບູນທັງໝົດ ຍ້ອນຄວາມລຶກລັບທີ່ເຮົາໄດ້ເປີດເຜີຍ.

# ບົດທີ 112

ຄຳວ່າ "ພຣະທຳ ແລະ ຄວາມເປັນຈິງດຳເນີນໄປຄຽງຄູ່ກັນ" ນັ້ນເປັນສ່ວນໜຶ່ງຂອງອຸປະນິໄສທີ່ຊອບທຳຂອງເຮົາ. ຈາກພຣະທຳເຫຼົ່ານີ້, ເຮົາຈະເຮັດໃຫ້ທຸກຄົນເຫັນເຖິງອຸປະນິໄສທັງໝົດຂອງເຮົາຢ່າງແນ່ນອນ. ຜູ້ຄົນຄິດວ່າ ສິ່ງນີ້ບໍ່ສາມາດຖືກບັນລຸໄດ້, ແຕ່ສຳລັບເຮົາແລ້ວ ມັນງ່າຍ ແລະ ສະບາຍ ແລະ ບໍ່ຕ້ອງພະຍາຍາມຫຍັງເລີຍ. ທັນທີທີ່ພຣະທຳຂອງເຮົາອອກຈາກປາກຂອງເຮົາ ມັນກໍຈະມີຂໍ້ແທ້ຈິງໃຫ້ຜູ້ຄົນສາມາດເຫັນໄດ້ໃນທັນທີ. ນີ້ແມ່ນອຸປະນິໄສຂອງເຮົາ. ເມື່ອເຮົາໄດ້ກ່າວເຖິງສິ່ງໃດໜຶ່ງ, ສິ່ງເຫຼົ່ານັ້ນກໍຈະຖືກເຮັດໃຫ້ສຳເລັດຢ່າງແນ່ນອນ. ບໍ່ດັ່ງນັ້ນ ເຮົາກໍຈະບໍ່ເວົ້າ. ໃນແນວຄິດຂອງມະນຸດ, ຄຳວ່າ "ຄວາມລອດພົ້ນ" ແມ່ນຖືກກ່າວເຖິງສຳລັບທຸກຄົນ, ແຕ່ນີ້ບໍ່ໄດ້ກົງກັບເຈດຕະນາຂອງເຮົາ. ໃນອະດີດ ເຮົາເວົ້າວ່າ "ເຮົາຊ່ວຍຄົນທີ່ບໍ່ມີຄວາມຮູ້ ແລະ ຜູ້ທີ່ສະແຫວງຢ່າງກະຕືລືລົ້ນໃຫ້ລອດພົ້ນຢູ່ສະເໝີ". ໃນນີ້ ຄຳວ່າ "ຊ່ວຍໃຫ້ລອດພົ້ນ" ແມ່ນກ່າວກ່ຽວກັບຄົນທີ່ໃຫ້ບໍລິການແກ່ເຮົາ ແລະ ມັນໝາຍຄວາມວ່າ ເຮົາຈະປະຕິບັດຢ່າງພິເສດຕໍ່ຜູ້ໃຫ້ບໍລິການດັ່ງກ່າວ. ເວົ້າອີກຢ່າງໜຶ່ງກໍຄື ເຮົາຈະຫຼຸດຜ່ອນການລົງໂທດສຳລັບຄົນເຫຼົ່ານັ້ນ. ເຖິງຢ່າງໃດກໍຕາມ ຜູ້ໃຫ້ບໍລິການເຫຼົ່ານັ້ນທີ່ຄົດໂກງ ແລະ ຫຼອກລວງຈະຢູ່ທ່າມກາງເປົ້າໝາຍແຫ່ງຄວາມພິນາດ ເຊິ່ງໝາຍຄວາມວ່າ ເຮົາຈະເຮັດໃຫ້ພວກເຂົາຢູ່ພາຍໃຕ້ການລົງໂທດທີ່ຮຸນແຮງ. (ເຖິງແມ່ນພວກເຂົາຢູ່ທ່າມກາງເປົ້າໝາຍແຫ່ງຄວາມພິນາດ, ພວກເຂົາກໍແຕກຕ່າງຫຼາຍຈາກຄົນທີ່ຈະຖືກທຳລາຍ: ພວກເຂົາຈະໄດ້ຮັບການລົງໂທດທີ່ຮຸນແຮງຕະຫຼອດໄປເປັນນິດ ແລະ ການລົງໂທດທີ່ຜູ້ຄົນເຫຼົ່ານັ້ນຈະໄດ້ຮັບແມ່ນການລົງໂທດຂອງມານຮ້າຍ ນັ້ນກໍຄືຊາຕານ. ນີ້ຍັງເປັນຄວາມໝາຍທີ່ແທ້ຈິງຂອງສິ່ງທີ່ເຮົາໝາຍເຖິງເມື່ອເຮົາເວົ້າວ່າ ຜູ້ຄົນເຫຼົ່ານັ້ນເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່). ແຕ່ເຮົາບໍ່ໄດ້ໃຊ້ພຣະທຳປະເພດນີ້ກ່ຽວກັບລູກຊາຍກົກຂອງເຮົາ; ກ່ຽວກັບພວກເຂົາ ເຮົາເວົ້າວ່າ ເຮົາຈະຟື້ນຟູລູກຊາຍກົກຂອງເຮົາ ແລະ ພວກເຂົາຈະກັບຄືນສູ່ພູເຂົາຊີໂອນອີກຄັ້ງ. ສະນັ້ນ ເຮົາຈຶ່ງເວົ້າຢູ່ສະເໝີວ່າ ລູກຊາຍກົກຂອງເຮົາແມ່ນຜູ້ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ໄດ້ຄັດເລືອກໄວ້ແລ້ວ. ດັ່ງເດີມແລ້ວ ລູກຊາຍກົກຂອງເຮົາເປັນຂອງເຮົາ ແລະ ພວກເຂົາມາຈາກເຮົາ ສະນັ້ນ ພວກເຂົາຕ້ອງກັບຄືນມາຫາເຮົາໃນທີ່ນີ້. ຖ້າປຽບທຽບລູກຊາຍ ແລະ ປະຊາຊົນກັບລູກຊາຍກົກ, ນີ້ຄືຄວາມແຕກຕ່າງລະຫວ່າງສະຫວັນ ແລະ ແຜ່ນດິນໂລກແທ້ໆ: ເຖິງແມ່ນວ່າລູກຊາຍ ແລະ ປະຊາຊົນຈະດີກວ່າຜູ້ໃຫ້ບໍລິການຫຼາຍ, ພວກເຂົາກໍບໍ່ມີທາງທີ່ຈະເປັນຄົນຂອງເຮົາໄດ້. ນອກນັ້ນ ມັນຍັງສາມາດເວົ້າໄດ້ວ່າ ລູກຊາຍ ແລະ ປະຊາຊົນແມ່ນຖືກເລືອກຈາກທ່າມກາງມະນຸດຊາດ. ສະນັ້ນ ເຮົາຈຶ່ງສຸມກຳລັງຂອງເຮົາໃສ່ລູກຊາຍກົກສະເໝີ ແລະ ຫຼັງຈາກນັ້ນ ເຮົາຈະປ່ອຍໃຫ້ລູກຊາຍກົກເຮັດໃຫ້ລູກຊາຍ ແລະ ປະຊາຊົນເຫຼົ່ານີ້ສົມບູນ. ສິ່ງເຫຼົ່ານີ້ແມ່ນບາດກ້າວຂອງພາລະກິດໃນອະນາຄົດຂອງເຮົາ. ຕອນນີ້ ມັນບໍ່ມີປະໂຫຍດທີ່ຈະບອກພວກເຈົ້າ, ສະນັ້ນ ເຮົາຈຶ່ງບໍ່ຄ່ອຍກ່າວມັນຕໍ່ລູກຊາຍ ແລະ ປະຊາຊົນ, ແຕ່ເຮົາເວົ້າຊໍ້າແລ້ວຊໍ້າອີກ ແລະ ກ່າວເຖິງເລື່ອງເຫຼົ່ານີ້ຄັ້ງແລ້ວຄັ້ງເລົ່າຕໍ່ລູກຊາຍກົກ. ນີ້ເປັນວິທີທີ່ເຮົາກ່າວ ແລະ ປະຕິບັດພາລະກິດ. ບໍ່ມີຜູ້ໃດສາມາດປ່ຽນແປງ

ສິ່ງນີ້ໄດ້, ມີພຽງເຮົາເທົ່ານັ້ນທີ່ມີອຳນາດຕັດສິນໃຈເດັດຂາດໃນທຸກໆສິ່ງ.

ທຸກມື້ ເຮົາຕໍ່ສູ້ກັບແນວຄິດຂອງພວກເຈົ້າ ແລະ ທຸກມື້ເຮົາວິເຄາະພວກເຈົ້າແຕ່ລະຄົນ. ເມື່ອເຮົາໄດ້ເວົ້າເຖິງຈຸດໃດໜຶ່ງ, ພວກເຈົ້າກໍເປັນຄືເກົ່າ ແລະ ພວກເຈົ້າກໍແຍກຄວາມເປັນມະນຸດຂອງເຮົາອອກຈາກຄວາມເປັນພຣະເຈົ້າຂອງເຮົາອີກຄັ້ງ. ໃນຕອນນີ້ ເວລາທີ່ຜູ້ຄົນຈະຖືກເປີດເຜີຍໄດ້ມາເຖິງແລ້ວ: ຜູ້ຄົນຄິດວ່າ ເຮົາຍັງດຳລົງຊີວິດຢູ່ໃນເນື້ອໜັງ ແລະ ບໍ່ໄດ້ເປັນພຣະເຈົ້າເອງເລີຍ, ເຮົາຍັງເປັນມະນຸດ ແລະ ພຣະເຈົ້າກໍຍັງເປັນພຣະເຈົ້າ ແລະ ພຣະເຈົ້າບໍ່ມີຫຍັງກ່ຽວຂ້ອງກັບຕົວຕົນທີ່ເຮົາເປັນ. ມະນຸດຊາດນີ້ຊ່າງເສື່ອມຊາມແທ້ໆ! ເຮົາໄດ້ກ່າວພຣະທຳຫຼາຍຢ່າງກ່ອນໜ້ານີ້, ແຕ່ເປັນເວລາດົນນານມາແລ້ວພວກເຈົ້າໄດ້ປະຕິບັດຕໍ່ພຣະທຳເຫຼົ່ານັ້ນຄືກັບວ່າພວກມັນບໍ່ມີຢູ່ຈິງ ແລະ ສິ່ງນີ້ກໍເຮັດໃຫ້ເຮົາເຕັມໄປດ້ວຍຄວາມກຽດຊັງຕໍ່ພວກເຈົ້າ ເຊິ່ງຝັງເລິກເຂົ້າໃນກະດູກຂອງເຮົາ! ແທ້ຈິງແລ້ວ ສິ່ງນີ້ເຮັດໃຫ້ເຮົາກຽດຊັງພວກເຈົ້າ! ຜູ້ໃດກ້າທ້າທາຍເຮົາຕາມອຳເພີໃຈບໍ, ເຮົາທີ່ເປັນພຣະເຈົ້າທີ່ສົມບູນ, ເຮົາທີ່ມີທັງຄວາມເປັນມະນຸດ ແລະ ຄວາມເປັນພຣະເຈົ້າທີ່ສົມບູນ? ຜູ້ໃດກ້າຕໍ່ຕ້ານເຮົາໃນຄວາມຄິດຂອງພວກເຂົາແດ່? ຫຼັງຈາກທີ່ໄພພິບັດທີ່ໂຫດຮ້າຍຂອງເຮົາໄດ້ເລີ່ມລົງມາ, ເຮົາກໍຈະລົງໂທດພວກເຂົາເທື່ອລະຄົນ, ບໍ່ປ່ອຍໃຫ້ຄົນໃດຄົນໜຶ່ງໄປ, ແຕ່ກົງກັນຂ້າມຈະລົງໂທດພວກເຂົາທຸກຄົນຢ່າງຮຸນແຮງ. ພຣະວິນຍານຂອງເຮົາປະຕິບັດພາລະກິດເປັນການສ່ວນຕົວ. ສິ່ງນີ້ບໍ່ໄດ້ໝາຍຄວາມວ່າ ເຮົາບໍ່ແມ່ນພຣະເຈົ້າເອງ; ໃນທາງກົງກັນຂ້າມ ມັນຍິ່ງໝາຍຄວາມວ່າ ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ. ຜູ້ຄົນບໍ່ຮູ້ຈັກເຮົາ ນັ້ນກໍຄື ພວກເຂົາທຸກຄົນຕໍ່ຕ້ານເຮົາ ແລະ ບໍ່ຫຼຽວເບິ່ງອຳນາດອັນຍິ່ງໃຫຍ່ຂອງເຮົາຈາກພຣະທຳຂອງເຮົາ, ແຕ່ກົງກັນຂ້າມ ພວກເຂົາພະຍາຍາມຄົ້ນຫາບາງສິ່ງໃນພຣະທຳຂອງເຮົາທີ່ພວກເຂົາສາມາດໃຊ້ຕໍ່ຕ້ານເຮົາ ແລະ ຈັບຜິດເຮົາ. ມື້ໜຶ່ງ ເມື່ອເຮົາປາກົດຕົວກັບລູກຊາຍກົກຂອງເຮົາໃນພູເຂົາຊີໂອນ, ເຮົາກໍຈະເລີ່ມຕົ້ນຈັດການກັບສິ່ງມີຊີວິດທີໜ້າເວດທະນາເຫຼົ່ານີ້. ໃນຊ່ວງເວລານີ້, ເຮົາກຳລັງປະຕິບັດພາລະກິດນີ້ເປັນຫຼັກ. ເມື່ອເຮົາໄດ້ກ່າວເຖິງຈຸດໃດໜຶ່ງ, ຜູ້ໃຫ້ບໍລິການຈຳນວນຫຼວງຫຼາຍກໍຈະຖອນຕົວ ແລະ ລູກຊາຍກົກກໍຈະທົນທຸກກັບຄວາມລຳບາກທຸກຮູບແບບເຊັ່ນກັນ. ດ້ວຍຄວາມຄືບໜ້າຂອງສອງຂັ້ນຕອນເຫຼົ່ານີ້ຂອງພາລະກິດ, ຂັ້ນຕອນຂອງພາລະກິດຂອງເຮົາກໍຈະມາເຖິງຈຸດສິ້ນສຸດ. ໃນເວລາດຽວກັນ, ເຮົາຈະຮັບເອົາລູກຊາຍກົກຂອງເຮົາກັບຄືນສູ່ພູເຂົາຊີໂອນ. ສິ່ງເຫຼົ່ານີ້ແມ່ນບາດກ້າວຂອງພາລະກິດຂອງເຮົາ.

ລູກຊາຍກົກຂອງເຮົາແມ່ນສ່ວນທີ່ຂາດບໍ່ໄດ້ໃນອານາຈັກຂອງເຮົາ ເຊິ່ງສາມາດເຫັນໄດ້ວ່າ ໃນຄວາມເປັນຈິງແລ້ວ ຕົວຕົນຂອງເຮົາແມ່ນອານາຈັກ ນັ້ນກໍຄື ການກຳເນີດຂອງອານາຈັກຂອງເຮົາເກີດຂຶ້ນຫຼັງຈາກການກຳເນີດລູກຊາຍກົກຂອງເຮົາ. ເວົ້າອີກຢ່າງໜຶ່ງກໍຄື ອານາຈັກຂອງເຮົາມີຢູ່ນັບຕັ້ງແຕ່ເວລາແຫ່ງການເນລະມິດສ້າງໂລກ ແລະ ເພື່ອຮັບເອົາລູກຊາຍກົກຂອງເຮົາ (ໝາຍເຖິງການຟື້ນຟູລູກຊາຍກົກຂອງເຮົາ) ແມ່ນການຟື້ນຟູອານາຈັກຂອງເຮົາ. ຈາກສິ່ງນີ້ ເຈົ້າສາມາດເຫັນໄດ້ວ່າລູກຊາຍກົກແມ່ນມີຄວາມສຳຄັນເປັນພິເສດ. ມີພຽງຫຼັງຈາກລູກຊາຍກົກຂອງເຮົາດຳລົງຢູ່ເທົ່ານັ້ນອານາຈັກຈຶ່ງຈະເກີດຂຶ້ນໄດ້, ຄວາມເປັນຈິງແຫ່ງການປົກຄອງດ້ວຍອຳນາດກໍຈະເກີດຂຶ້ນ, ຊີວິດໃໝ່

ຈະປາກົດອອກ ແລະ ຍຸກເກົ່າກໍຈະສິ້ນສຸດລົງຢ່າງສົມບູນ. ນີ້ແມ່ນກະແສທີ່ບໍ່ສາມາດຫຼີກເວັ້ນໄດ້. ເພາະລູກຊາຍກົກຢູ່ໃນຕຳແໜ່ງນີ້, ພວກເຂົາເປັນສັນຍາລັກແກ່ຄວາມພິນາດຂອງໂລກ, ການລົ້ມສະຫຼາຍຂອງຊາຕານ, ການເປີດເຜີຍເຖິງທາດແທ້ຂອງຜູ້ໃຫ້ບໍລິການ ແລະ ຂໍ້ແທ້ຈິງທີ່ມັງກອນແດງຜູ້ຍິ່ງໃຫຍ່ຈະບໍ່ມີເຊື້ອສາຍ ແລະ ຈະລົງສູ່ທະເລສາບແຫ່ງໄຟ ແລະ ມາດ; ສະນັ້ນ ຄົນທີ່ມີອຳນາດ ແລະ ທຸກຄົນທີ່ເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ຈະເຂົ້າຮ່ວມໃນການຂັດຂວາງ, ການຕໍ່ຕ້ານ ແລະ ການທຳລາຍຄັ້ງແລ້ວຄັ້ງເລົ່າ. ໃນຂະນະດຽວກັນ ເຮົາຈະຍົກລະດັບ, ເປັນພະຍານ ແລະ ເປີດເຜີຍລູກຊາຍກົກຂອງເຮົາຄັ້ງແລ້ວຄັ້ງເລົ່າ. ຍ້ອນມີພຽງແຕ່ຄົນທີ່ມາຈາກເຮົາຈຶ່ງມີສິດເປັນພະຍານໃຫ້ແກ່ເຮົາ; ພວກເຂົາເທົ່ານັ້ນທີ່ມີຄຸນສົມບັດທີ່ຈະດຳລົງຊີວິດຕາມເຮົາ ແລະ ພວກເຂົາເທົ່ານັ້ນທີ່ມີພື້ນຖານທີ່ຈະຕໍ່ສູ້ໃນບັ້ນຮົບ ແລະ ມີໄຊຊະນະຢ່າງສວຍງາມເພື່ອເຮົາ. ຄົນທີ່ຢູ່ຫ່າງຈາກເຮົາແມ່ນບໍ່ມີຫຍັງ ນອກຈາກເປັນເສດຂີ້ດິນທີ່ຢູ່ໃນມືຂອງເຮົາ ນັ້ນກໍຄື ສິ່ງຖືກສ້າງ, ພວກເຂົາທຸກຄົນເລີຍ. ຄົນທີ່ເປັນລູກຊາຍ ແລະ ປະຊາຊົນບໍ່ໄດ້ເປັນຫຍັງຫຼາຍໄປກວ່າຄົນທີ່ຖືກເລືອກຈາກບັນດາສິ່ງຖືກສ້າງໃນການເນລະມິດສ້າງ, ແຕ່ພວກເຂົາບໍ່ໄດ້ເປັນຄົນຂອງເຮົາ. ສະນັ້ນ ຈຶ່ງມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍລະຫວ່າງລູກຊາຍກົກ ແລະ ລູກຊາຍ. ລູກຊາຍແມ່ນບໍ່ມີຄຸນສົມບັດທີ່ຈະທຽບກັບລູກຊາຍກົກເລີຍ ນັ້ນກໍຄື ພວກເຂົາຖືກປົກຄອງ ແລະ ຖືກຄວບຄຸມໂດຍລູກຊາຍກົກ. ຕອນນີ້ ພວກເຈົ້າຄວນຊັດເຈນກ່ຽວກັບເລື່ອງນີ້! ພຣະທຳທຸກຂໍ້ທີ່ເຮົາກ່າວແມ່ນຄວາມຈິງ ແລະ ບໍ່ມີທາງເປັນສິ່ງທີ່ຜິດໄດ້. ທັງໝົດນີ້ເປັນສ່ວນໜຶ່ງຂອງການສະແດງອອກເຖິງຕົວຕົນຂອງເຮົາ ແລະ ມັນຄືພຣະຄຳຂອງເຮົາ.

ເຮົາໄດ້ເວົ້າວ່າ ເຮົາບໍ່ກ່າວພຣະທຳທີ່ວ່າງເປົ່າ ແລະ ເຮົາບໍ່ເຮັດຜິດ; ສິ່ງນີ້ກໍພຽງພໍທີ່ຈະສະແດງເຖິງຄວາມສະຫງ່າຜ່າເຜີຍຂອງເຮົາ. ແຕ່ຜູ້ຄົນບໍ່ສາມາດແຍກແຍະສິ່ງທີ່ດີອອກຈາກສິ່ງທີ່ບໍ່ດີ ແລະ ເມື່ອການຂ້ຽນຕີຂອງເຮົາເກີດຂຶ້ນກັບພວກເຂົາເທົ່ານັ້ນ ພວກເຂົາຈຶ່ງຈະເຊື່ອໝັ້ນຢ່າງແທ້ຈິງ; ບໍ່ດັ່ງນັ້ນ ພວກເຂົາກໍຍັງຄົງຈະກະບົດ ແລະ ຫົວແຂງ. ນີ້ຄືເຫດຜົນທີ່ເຮົາໃຊ້ການຂ້ຽນຕີເພື່ອໂຈມຕີຄືນໃສ່ມະນຸດຊາດທັງປວງ. ໃນແນວຄິດຂອງມະນຸດ ໃນເມື່ອມີພຽງພຣະເຈົ້າອົງດຽວ ເປັນຫຍັງຈຶ່ງມີລູກຊາຍກົກຫຼາຍຄົນທີ່ມາຈາກເຮົາ? ເຮົາສາມາດເວົ້າໄດ້ແບບນີ້: ສຳລັບເລື່ອງຂອງເຮົາເອງ, ເຮົາສາມາດກ່າວເຖິງພວກມັນໃນລັກສະນະໃດກໍຕາມທີ່ເຮົາປາຖະໜາ. ມະນຸດສາມາດເຮັດຫຍັງໃຫ້ເຮົາໄດ້? ເຮົາຍັງສາມາດເວົ້າໄດ້ແບບນີ້: ເຖິງແມ່ນລູກຊາຍກົກ ແລະ ເຮົາບໍ່ໄດ້ມີຮູບລັກສະນະດຽວກັນ, ພວກເຮົາກໍມາຈາກພຣະວິນຍານອົງດຽວກັນ, ສະນັ້ນ ພວກເຂົາທຸກຄົນຈຶ່ງສາມາດມີຄວາມຄິດດຽວກັນກັບເຮົາເມື່ອພວກເຂົາຮ່ວມມືກັບເຮົາ. ເຫດຜົນທີ່ພວກເຮົາບໍ່ໄດ້ມີຮູບລັກສະນະດຽວກັນກໍເພື່ອໃຫ້ທຸກຄົນສາມາດເຫັນເຖິງທຸກສ່ວນໃນຕົວຕົນຂອງເຮົາຢ່າງຊັດເຈນເປັນພິເສດ. ນີ້ຄືເຫດຜົນທີ່ເຮົາປ່ອຍໃຫ້ລູກຊາຍກົກຂອງເຮົາມີສິດອຳນາດຮ່ວມກັນກັບເຮົາເໜືອທຸກຊົນຊາດ ແລະ ທຸກຄົນ. ນີ້ຄືນ້ຳສຽງສຸດທ້າຍຂອງກິດບັນຍັດແຫ່ງການບໍລິຫານຂອງເຮົາ ("ນ້ຳສຽງສຸດທ້າຍ" ນີ້ທີ່ເຮົາກ່າວເຖິງໝາຍຄວາມວ່ານ້ຳສຽງຂອງເຮົານັ້ນເບົາ ແລະ ເຮົາໄດ້ເລີ່ມກ່າວຕໍ່ລູກຊາຍ ແລະ ປະຊາຊົນ). ຄົນສ່ວນໃຫຍ່ມີຄວາມສົງໄສກ່ຽວກັບດ້ານນີ້, ແຕ່ມັນບໍ່ຈຳເປັນທີ່ພວກເຂົາຈະເຮັດໃຫ້ຕົນເອງເຕັມໄປດ້ວຍຄວາມສົງໄສຫຼາຍ

ຂະໜາດນັ້ນ. ເຮົາຈະເປີດໂປງແນວຄິດຂອງທຸກຄົນເທື່ອລະຄົນ ເພື່ອເຮັດໃຫ້ພວກເຂົາຮູ້ສຶກອັບອາຍຢ່າງບໍ່ມີບ່ອນໃຫ້ລີ້. ເຮົາເດີນທາງທົ່ວຈັກກະວານ ແລະ ສຸດຂອບແຜ່ນດິນໂລກ ແລະ ສັງເກດເບິ່ງໃບໜ້າທັງໝົດຂອງຈັກກະວານ. ເຮົາກວດສອບຄົນທຸກປະເພດ ນັ້ນກໍຄື ບໍ່ມີຜູ້ໃດທີ່ສາມາດຫຼົບໜີຈາກມືຂອງເຮົາໄດ້. ເຮົາມີສ່ວນຮ່ວມໃນທຸກສິ່ງທຸກປະເພດ ແລະ ບໍ່ມີຫຍັງທີ່ເຮົາບໍ່ໄດ້ຈັດການເປັນການສ່ວນຕົວ. ຜູ້ໃດກ້າປະຕິເສດອຳນາດອັນຍິ່ງໃຫຍ່ຂອງເຮົາ? ຜູ້ໃດກ້າທີ່ຈະບໍ່ເຊື່ອກ່ຽວກັບຕົວເຮົາຢ່າງແທ້ຈິງ? ຜູ້ໃດກ້າທີ່ຈະບໍ່ກົ້ມຫົວລົງຕໍ່ໜ້າເຮົາທັງໝົດ? ສະຫວັນທັງປວງຈະປ່ຽນແປງ ຍ້ອນລູກຊາຍກົກຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ແຜ່ນດິນໂລກທັງປວງຈະສັ່ນໄຫວຢ່າງຮຸນແຮງ ຍ້ອນເຮົາ ແລະ ລູກຊາຍກົກຂອງເຮົາ. ທຸກຄົນຈະຄຸເຂົ່າລົງຕໍ່ໜ້າຕົວຕົນຂອງເຮົາ ແລະ ທຸກສິ່ງຈະມາຢູ່ພາຍໃນການຄວບຄຸມໂດຍມືຂອງເຮົາຢ່າງແນ່ນອນ ໂດຍບໍ່ຂໍ້ຜິດພາດແມ່ນແຕ່ໜ້ອຍດຽວ. ທຸກຄົນຕ້ອງເຊື່ອທັງໝົດ ແລະ ທຸກສິ່ງຈະມາຢູ່ໃນເຮືອນຂອງເຮົາ ແລະ ໃຫ້ບໍລິການແກ່ເຮົາ. ນີ້ແມ່ນສ່ວນສຸດທ້າຍຂອງກົດບັນຍັດແຫ່ງການບໍລິຫານຂອງເຮົາ. ຈາກນີ້ເປັນຕົ້ນໄປ ມາດຕາຕ່າງໆທັງໝົດຂອງກົດບັນຍັດແຫ່ງການບໍລິຫານຂອງເຮົາ ເຊິ່ງແນໃສ່ຜູ້ຄົນທີ່ແຕກຕ່າງກັນ ກໍຈະເລີ່ມເກີດໝາກຜົນ (ເພາະກົດບັນຍັດແຫ່ງການບໍລິຫານຂອງເຮົາຖືກເປີດເຜີຍຕໍ່ສາທາລະນະຢ່າງຄົບຖ້ວນ ແລະ ການຈັດແຈງທີ່ເໝາະສົມຈະຖືກສ້າງຂຶ້ນສຳລັບຄົນທຸກປະເພດ ແລະ ທຸກສິ່ງ. ທຸກຄົນຈະຢູ່ໃນຕຳແໜ່ງທີ່ເໝາະສົມຂອງພວກເຂົາ ແລະ ທາດແທ້ຂອງຄົນທຸກປະເພດຈະຖືກເປີດໂປງອອກ ເພາະກົດບັນຍັດແຫ່ງການບໍລິຫານຂອງເຮົາ). ສິ່ງນັ້ນຈະເປັນການມາເຖິງຂອງກົດບັນຍັດແຫ່ງການບໍລິຫານຕົວຈິງ ແລະ ແທ້ຈິງ.

ບັດນີ້ ອີງຕາມບາດກ້າວໃນພາລະກິດຂອງເຮົາ, ເຮົາເວົ້າໃນສິ່ງທີ່ເຮົາຕ້ອງການເວົ້າ ແລະ ທຸກຄົນຕ້ອງຈິງຈັງກັບພຣະທຳຂອງເຮົາ. ຕະຫຼອດຍຸກຕ່າງໆ, ໄພ່ພົນທຸກຄົນໄດ້ກ່າວເຖິງ "ເຢລູຊາເລັມໃໝ່" ແລະ ທຸກຄົນຮູ້ຈັກມັນ, ແຕ່ບໍ່ມີຜູ້ໃດເຂົ້າໃຈຄວາມໝາຍແທ້ຈິງຂອງຄຳສັບນີ້. ໃນຂະນະທີ່ພາລະກິດໃນປັດຈຸບັນໄດ້ດຳເນີນໄປຈົນເຖິງຂັ້ນຕອນນີ້, ເຮົາຈະເປີດເຜີຍຄວາມໝາຍແທ້ຈິງຂອງຄຳສັບນີ້ໃຫ້ກັບພວກເຈົ້າ ເພື່ອວ່າພວກເຈົ້າອາດຈະໄດ້ເຂົ້າໃຈມັນ. ແຕ່ມີການຈຳກັດໃນການເປີດເຜີຍຂອງເຮົານັ້ນກໍຄື ບໍ່ວ່າເຮົາຈະອະທິບາຍມັນແບບໃດກໍຕາມ ແລະ ບໍ່ວ່າເຮົາເວົ້າມັນຢ່າງຊັດເຈນສໍ່າໃດກໍຕາມ ພວກເຈົ້າກໍບໍ່ສາມາດເຂົ້າໃຈໄດ້ຢ່າງສົມບູນ ເພາະບໍ່ມີມະນຸດຄົນໃດສາມາດສຳພັດເຖິງຄວາມເປັນຈິງຂອງຄຳສັບນີ້. ໃນອະດີດ ເຢລູຊາເລັມໝາຍເຖິງບ່ອນຢູ່ອາໄສຂອງເຮົາເທິງໂລກ ນັ້ນກໍຄື ເປັນບ່ອນທີ່ເຮົາຍ່າງ ແລະ ເຄື່ອນໄຫວ. ແຕ່ຄຳວ່າ "ໃໝ່" ປ່ຽນແປງຄຳສັບນີ້ ແລະ ຕອນນີ້ ມັນບໍ່ໄດ້ເປັນຄືດັ່ງທີ່ມັນເຄີຍເປັນ. ຜູ້ຄົນບໍ່ສາມາດເຂົ້າໃຈມັນໄດ້ແມ່ນແຕ່ໜ້ອຍດຽວ. ບາງຄົນຄິດວ່າ ມັນໝາຍເຖິງອານາຈັກຂອງເຮົາ; ບາງຄົນກໍຄິດວ່າ ມັນແມ່ນຕົວຕົນທີ່ເຮົາເປັນ; ບາງຄົນຄິດວ່າ ມັນຄືສະຫວັນ ແລະ ແຜ່ນດິນໂລກໃໝ່; ແລະ ບາງຄົນກໍຄິດວ່າ ມັນເປັນໂລກໃໝ່ທີ່ຈະມາເຖິງຫຼັງຈາກທີ່ເຮົາທຳລາຍໂລກນີ້. ເຖິງແມ່ນວ່າຄວາມຄິດຂອງບຸກຄົນໃດໜຶ່ງຈະຊັບຊ້ອນຢ່າງຫຼວງຫຼາຍ ແລະ ສາມາດມີຈິນຕະນາການທີ່ອຸດົມສົມບູນ, ພວກເຂົາກໍຍັງບໍ່ສາມາດເຂົ້າໃຈຫຍັງກ່ຽວກັບສິ່ງນີ້ໄດ້. ຕະຫຼອດຍຸກຕ່າງໆ ຜູ້ຄົນຄາດຫວັງທີ່ຈະຮູ້ ຫຼື ໄດ້ເຫັນຄວາມໝາຍແທ້ຈິງຂອງຄຳສັບນີ້, ແຕ່ພວກເຂົາບໍ່ສາມາດບັນລຸຄວາມ

ປາຖະໜາຂອງພວກເຂົາໄດ້ ນັ້ນກໍຄື ພວກເຂົາທຸກຄົນຜິດຫວັງ ແລະ ຕາຍໄປ, ປະຖິ້ມຄວາມປາຖະໜາຂອງພວກເຂົາໄວ້ຂ້າງຫຼັງ; ເພາະເວລາຂອງເຮົາຍັງບໍ່ທັນໄດ້ມາເຖິງ, ເຮົາບໍ່ສາມາດບອກຜູ້ຄົນໄດ້ຢ່າງງ່າຍດາຍ. ຍ້ອນພາລະກິດຂອງເຮົາໄດ້ດຳເນີນມາເຖິງຂັ້ນຕອນນີ້, ເຮົາຈະບອກທຸກສິ່ງແກ່ພວກເຈົ້າ. ເຢລູຊາເລັມໃໝ່ປະກອບມີສີ່ສິ່ງເຫຼົ່ານີ້: ຄວາມໂກດຮ້າຍຂອງເຮົາ, ກົດບັນຍັດແຫ່ງການບໍລິຫານຂອງເຮົາ, ອານາຈັກຂອງເຮົາ ແລະ ພອນອັນບໍ່ສິ້ນສຸດທີ່ເຮົາປະທານໃຫ້ແກ່ລູກຊາຍກົກຂອງເຮົາ. ເຫດຜົນທີ່ເຮົາໃຊ້ຄຳວ່າ "ໃໝ່" ກໍເພາະສີ່ສ່ວນເຫຼົ່ານີ້ລີ້ລັບ. ເພາະບໍ່ມີຜູ້ໃດຮູ້ຈັກຄວາມໂກດຮ້າຍຂອງເຮົາ, ບໍ່ມີຜູ້ໃດຮູ້ຈັກກົດບັນຍັດແຫ່ງການບໍລິຫານຂອງເຮົາ, ບໍ່ມີຜູ້ໃດໄດ້ເຫັນອານາຈັກຂອງເຮົາ ແລະ ບໍ່ມີຜູ້ໃດໄດ້ຮັບພອນຂອງເຮົາ, "ໃໝ່" ຈຶ່ງໝາຍເຖິງສິ່ງທີ່ລີ້ລັບ. ບໍ່ມີຜູ້ໃດເຂົ້າໃຈຢ່າງຄົບຖ້ວນກ່ຽວກັບສິ່ງທີ່ເຮົາໄດ້ເວົ້າ, ເພາະເຢລູຊາເລັມໃໝ່ໄດ້ລົງມາເທິງແຜ່ນດິນໂລກ, ແຕ່ບໍ່ມີຜູ້ໃດໄດ້ປະສົບກັບຄວາມເປັນຈິງຂອງເຢລູຊາເລັມໃໝ່ເປັນການສ່ວນຕົວ. ບໍ່ວ່າເຮົາຈະເວົ້າກ່ຽວກັບມັນຢ່າງຄົບຖ້ວນສໍ່າໃດກໍຕາມ, ຜູ້ຄົນກໍຈະບໍ່ເຂົ້າໃຈທັງໝົດ. ເຖິງແມ່ນວ່າຜູ້ໃດຜູ້ໜຶ່ງຈະເຂົ້າໃຈ, ຄວາມເຂົ້າໃຈນີ້ກໍເປັນພຽງຄຳເວົ້າຂອງພວກເຂົາ, ຄວາມຄິດຂອງພວກເຂົາ ແລະ ແນວຄິດຂອງພວກເຂົາເທົ່ານັ້ນ. ນີ້ແມ່ນກະແສທີ່ບໍ່ສາມາດຫຼີກເວັ້ນໄດ້; ມັນເປັນວິທີດຽວທີ່ຈະກ້າວໄປຂ້າງໜ້າ ແລະ ບໍ່ມີຜູ້ໃດສາມາດຫຼຸດພົ້ນຈາກມັນໄດ້.

# ບົດທີ 113

ສະຕິປັນຍາຂອງເຮົາແມ່ນຢູ່ພາຍໃນການກະທຳທຸກຢ່າງທີ່ເຮົາເຮັດ, ແຕ່ໂດຍພື້ນຖານແລ້ວມະນຸດແມ່ນບໍ່ສາມາດຢັ່ງເຖິງສະຕິປັນຍານີ້ເລີຍ; ມະນຸດພຽງແຕ່ສາມາດເຫັນການກະທຳຂອງເຮົາ ແລະ ພຣະທຳຂອງເຮົາເທົ່ານັ້ນ, ບໍ່ແມ່ນສະຫງ່າລາສີຂອງເຮົາ ຫຼື ການປາກົດຕົວຕົນຂອງເຮົາ ຍ້ອນໂດຍພື້ນຖານແລ້ວ ມະນຸດຂາດຄວາມສາມາດນີ້. ສະນັ້ນ ຫາກປາສະຈາກການທີ່ເຮົາເຮັດໃຫ້ມະນຸດປ່ຽນແປງ ລູກຊາຍກົກຂອງເຮົາ ແລະ ເຮົາກໍຈະກັບຄືນສູ່ຊີໂອນ ແລະ ປ່ຽນແປງຮູບຮ່າງ ເພື່ອໃຫ້ມະນຸດໄດ້ເຫັນສະຕິປັນຍາຂອງເຮົາ ແລະ ອຳນາດອັນໄພສານຂອງເຮົາ. ສະຕິປັນຍາ ແລະ ອຳນາດອັນໄພສານຂອງເຮົາ ເຊິ່ງມະນຸດໄດ້ເຫັນໃນຕອນນີ້ ກໍເປັນພຽງສ່ວນໜຶ່ງທີ່ເລັກນ້ອຍໃນສະຫງ່າລາສີຂອງເຮົາ ບໍ່ຄວນຄ່າແກ່ການກ່າວເຖິງແມ່ນແຕ່ໜ້ອຍດຽວ. ຈາກນີ້ ມັນສາມາດເຫັນໄດ້ວ່າ ສະຕິປັນຍາຂອງເຮົາ ແລະ ສະຫງ່າລາສີຂອງເຮົາບໍ່ສິ້ນສຸດ ນັ້ນກໍຄື ສິ່ງເຫຼົ່ານັ້ນເລິກເຊິ່ງໂດຍບໍ່ສາມາດວັດແທກໄດ້ ແລະ ໂດຍພື້ນຖານແລ້ວ ຄວາມຄິດຂອງມະນຸດບໍ່ສາມາດພິຈາລະນາ ຫຼື ເຂົ້າໃຈມັນໄດ້. ການສ້າງອານາຈັກແມ່ນໜ້າທີ່ຂອງລູກຊາຍກົກ ແລະ ນີ້ແມ່ນໜ້າທີ່ຂອງເຮົາເຊັ່ນກັນ. ນັ້ນໝາຍຄວາມວ່າ ມັນຄືລາຍການທີ່ຢູ່ໃນແຜນການຄຸ້ມຄອງຂອງເຮົາ. ການສ້າງອານາຈັກບໍ່ຄືກັບການສ້າງຄຣິສຕະຈັກ; ຍ້ອນລູກຊາຍກົກຂອງເຮົາ ແລະ ເຮົາເປັນຕົວຕົນຂອງເຮົາ ແລະ ອານາຈັກ, ແລ້ວເມື່ອລູກຊາຍກົກຂອງເຮົາ ແລະ ເຮົາເຂົ້າສູ່ພູຊີໂອນ, ການສ້າງອານາຈັກກໍຈະຖືກບັນລຸແລ້ວ. ເວົ້າອີກຢ່າງໜຶ່ງກໍຄື ການສ້າງອານາຈັກແມ່ນບາດກ້າວໜຶ່ງໃນພາລະກິດ ນັ້ນກໍຄື ບາດກ້າວເພື່ອເຂົ້າສູ່ໂລກຝ່າຍວິນຍານ. (ເຖິງຢ່າງໃດກໍຕາມ ທຸກສິ່ງທີ່ເຮົາໄດ້ເຮັດນັບຕັ້ງແຕ່ການສ້າງໂລກກໍແມ່ນເພື່ອເຫັນແກ່ບາດກ້າວນີ້. ເຖິງແມ່ນເຮົາເວົ້າວ່າ ມັນເປັນບາດກ້າວໜຶ່ງ, ໃນຄວາມເປັນຈິງແລ້ວ ມັນບໍ່ແມ່ນບາດກ້າວໜຶ່ງເລີຍ). ສະນັ້ນ ເຮົາຈຶ່ງໃຊ້ຜູ້ໃຫ້ບໍລິການທຸກຄົນຮັບໃຊ້ໃນບາດກ້າວນີ້ ແລະ ຜົນຕາມມາກໍຄື ໃນລະຫວ່າງຍຸກສຸດທ້າຍ ຄົນຈຳນວນຫຼວງຫຼາຍຈະຖອນຕົວ; ພວກເຂົາທຸກຄົນຈະໃຫ້ບໍລິການແກ່ລູກຊາຍກົກ. ຜູ້ໃດກໍຕາມທີ່ເສຍສະຫຼະຄວາມເມດຕາໃຫ້ແກ່ຜູ້ໃຫ້ບໍລິການເຫຼົ່ານີ້ກໍຈະຕາຍດ້ວຍການສາບແຊ່ງຂອງເຮົາ. (ຜູ້ໃຫ້ບໍລິການທຸກຄົນເປັນຕົວແທນໃຫ້ກັບກົນອຸບາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ລ້ວນແລ້ວແຕ່ເປັນລູກນ້ອງຂອງຊາຕານ, ສະນັ້ນ ຄົນທີ່ເສຍສະຫຼະຄວາມເມດຕາໃຫ້ແກ່ພວກເຂົາກໍເປັນຜູ້ສົມຮູ້ຮ່ວມຄິດຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ເປັນຂອງຊາຕານ). ເຮົາຮັກທຸກຄົນທີ່ເຮົາຮັກ ແລະ ກຽດຊັງເປົ້າໝາຍທັງໝົດໃນການສາບແຊ່ງ ແລະ ການເຜົາໄໝ້ຂອງເຮົາ. ພວກເຈົ້າຍັງສາມາດເຮັດແບບນີ້ໄດ້ບໍ? ແນ່ນອນ ເຮົາຈະບໍ່ໃຫ້ອະໄພຜູ້ໃດກໍຕາມທີ່ຢືນຕໍ່ສູ້ເຮົາ ຫຼື ເຮົາຈະບໍ່ປ່ອຍພວກເຂົາໄປ! ໃນການປະຕິບັດແຕ່ລະການກະທຳ, ເຮົາຈັດແຈງໃຫ້ຜູ້ໃຫ້ບໍລິການຈຳນວນຫຼວງຫຼາຍຮັບໃຊ້ເຮົາ. ສະນັ້ນ ມັນຈຶ່ງສາມາດເຫັນໄດ້ວ່າ ຕະຫຼອດປະຫວັດສາດ ມັນແມ່ນເພື່ອເຫັນແກ່ບາດກ້າວຂອງປັດຈຸບັນ ຜູ້ປະກາດພຣະທຳ ແລະ ອັກຄະສາວົກທັງໝົດຈຶ່ງໄດ້ໃຫ້ບໍລິການ ແລະ ພວກເຂົາບໍ່ໄດ້ເປັນທີ່ພໍໃຈເຮົາ, ບໍ່ໄດ້ມາຈາກເຮົາ. (ເຖິງແມ່ນວ່າພວກເຂົາສ່ວນໃຫຍ່ຈິ່ງຮັກພັກດີຕໍ່ເຮົາ, ກໍບໍ່ມີຜູ້ໃດເປັນ

ຂອງເຮົາ. ສະນັ້ນ ການທີ່ພວກເຂົາແລ່ນໄປມາກໍແມ່ນເພື່ອສ້າງພື້ນຖານຂອງບາດກ້າວສຸດທ້າຍນີ້ສຳລັບເຮົາ, ແຕ່ຄວາມພະຍາຍາມທັງໝົດຂອງພວກເຂົາກໍໄຮ້ປະໂຫຍດ ຕາບໃດທີ່ພວກເຂົາກ່ຽວຂ້ອງກັບພວກເຂົາເອງ). ດ້ວຍເຫດນັ້ນ ໃນລະຫວ່າງຍຸກສຸດທ້າຍກໍຈະມີຜູ້ຄົນຈຳນວນຫຼວງຫຼາຍຍິ່ງຂຶ້ນທີ່ຈະຖອນຕົວ. (ເຫດຜົນທີ່ເຮົາເວົ້າວ່າ "ຈຳນວນຫຼວງຫຼາຍ" ກໍຄື ແຜນການຄຸ້ມຄອງຂອງເຮົາໄດ້ໄປເຖິງຈຸດຈົບຂອງມັນ, ການສ້າງອານາຈັກຂອງເຮົາກໍໄດ້ສຳເລັດແລ້ວ ແລະ ລູກຊາຍກົກກໍໄດ້ນັ່ງເທິງບັນລັງ). ນັ້ນແມ່ນລ້ວນແລ້ວແຕ່ເນື່ອງຈາກການປາກົດຕົວຂອງລູກຊາຍກົກ. ຍ້ອນລູກຊາຍກົກໄດ້ປາກົດຕົວຂຶ້ນ, ມັງກອນແດງຜູ້ຍິ່ງໃຫຍ່ຈຶ່ງພະຍາຍາມທຸກວິທີທາງທີ່ສາມາດເຮັດໄດ້ເພື່ອສ້າງຄວາມເສຍຫາຍ ແລະ ເຮັດໃຫ້ທຸກເສັ້ນທາງເສື່ອມສະພາບ. ມັນສົ່ງວິນຍານທີ່ຊົ່ວຮ້າຍທຸກຮູບແບບເພື່ອມາໃຫ້ບໍລິການແກ່ເຮົາ ຜູ້ທີ່ສະແດງທາດແທ້ຂອງພວກມັນໃນຊ່ວງເວລາປັດຈຸບັນ ແລະ ຜູ້ທີ່ພະຍາຍາມກໍ່ກວນການຄຸ້ມຄອງຂອງເຮົາ. ສິ່ງເຫຼົ່ານີ້ແມ່ນບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ; ພວກມັນແມ່ນທຸກສິ່ງທີ່ຢູ່ໃນໂລກຝ່າຍວິນຍານ. ສະນັ້ນ ຜູ້ຄົນຈຶ່ງບໍ່ເຊື່ອວ່າ ມີຄົນຈຳນວນຫຼວງຫຼາຍທີ່ຖອນຕົວ, ແຕ່ເຮົາຮູ້ວ່າເຮົາເຮັດຫຍັງ, ເຮົາເຂົ້າໃຈການຄຸ້ມຄອງຂອງເຮົາ; ນີ້ແມ່ນເຫດຜົນທີ່ບໍ່ໃຫ້ມະນຸດແຊກແຊງ. (ມື້ທີ່ວິນຍານຊົ່ວຮ້າຍທີ່ຕໍ່າຊ້າທຸກປະເພດຈະເປີດເຜີຍຕົວຕົນທີ່ແທ້ຈິງຂອງພວກມັນກໍຈະມາເຖິງ ແລະ ມະນຸດທຸກຄົນຈະເຊື່ອໝັ້ນຢ່າງຈິງໃຈ).

ເຮົາຮັກລູກຊາຍກົກຂອງເຮົາ, ແຕ່ຄົນທີ່ເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ຮັກເຮົາດ້ວຍຄວາມຈິງໃຈຢ່າງຫຼວງຫຼາຍ, ເຮົາບໍ່ໄດ້ຮັກເລີຍ; ໃນຄວາມເປັນຈິງແລ້ວ ເຮົາກຽດຊັງພວກເຂົາທຸກຄົນຫຼາຍຊໍ້າອີກ. (ຜູ້ຄົນເຫຼົ່ານີ້ບໍ່ໄດ້ມາຈາກເຮົາ ແລະ ເຖິງແມ່ນພວກເຂົາສະແດງເຈດຕະນາດີ ແລະ ເວົ້າດ້ວຍຄຳເວົ້າທີ່ມ່ວນຫູ, ສິ່ງນີ້ກໍລ້ວນແລ້ວແຕ່ເປັນກົນອຸບາຍຂອງມັງກອນແດງຜູ້ຍິ່ງໃຫຍ່ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງກຽດຊັງພວກເຂົາຈົນເຂົ້າກະດູກດຳຂອງເຮົາ). ນີ້ແມ່ນອຸປະນິໄສຂອງເຮົາ ແລະ ນີ້ແມ່ນຄວາມຊອບທຳທັງໝົດຂອງເຮົາ. ມະນຸດບໍ່ສາມາດຢັ່ງເຖິງມັນໄດ້ເລີຍ. ເປັນຫຍັງຄວາມຊອບທຳທັງໝົດຂອງເຮົາຈຶ່ງຖືກເປີດເຜີຍໃນທີ່ນີ້? ຈາກນີ້ ຄົນໃດໜຶ່ງກໍສາມາດຮັບຮູ້ເຖິງອຸປະນິໄສອັນບໍລິສຸດຂອງເຮົາ ທີ່ບໍ່ອົດທົນຕໍ່ການເຮັດຜິດ. ເຮົາສາມາດຮັກລູກຊາຍກົກຂອງເຮົາ ແລະ ກຽດຊັງທຸກຄົນທີ່ບໍ່ແມ່ນລູກຊາຍກົກຂອງເຮົາ (ເຖິງແມ່ນວ່າພວກເຂົາເປັນຄົນທີ່ຈົງຮັກພັກດີກໍຕາມ). ນີ້ແມ່ນອຸປະນິໄສຂອງເຮົາ. ພວກເຈົ້າບໍ່ສາມາດເຫັນບໍ? ໃນແນວຄິດຂອງຜູ້ຄົນ ເຮົາເປັນພຣະເຈົ້າທີ່ເມດຕາຢູ່ສະເໝີ ແລະ ເຮົາຮັກທຸກຄົນທີ່ຮັກເຮົາ; ການຕີຄວາມໝາຍນີ້ບໍ່ແມ່ນເປັນການໝິ່ນປະໝາດເຮົາບໍ? ເຮົາຈະສາມາດຮັກສັດ ແລະ ສັດຮ້າຍບໍ? ເຮົາຈະສາມາດຮັບເອົາຊາຕານເປັນລູກຊາຍກົກຂອງເຮົາ ແລະ ມີຄວາມສຸກກັບມັນບໍ? ຊ່າງໄຮ້ສາລະ! ພາລະກິດຂອງເຮົາຖືກປະຕິບັດໃນລູກຊາຍກົກຂອງເຮົາ ແລະ ນອກຈາກລູກຊາຍກົກຂອງເຮົາແລ້ວ ເຮົາກໍບໍ່ມີຜູ້ໃດອີກໃຫ້ຮັກ. (ລູກຊາຍ ແລະ ປະຊາຊົນເປັນສ່ວນເພີ່ມເຕີມ, ແຕ່ບໍ່ສຳຄັນ). ຜູ້ຄົນເວົ້າວ່າ ເຮົາມັກເຮັດພາລະກິດຫຼາຍຢ່າງທີ່ໄຮ້ປະໂຫຍດ, ແຕ່ໃນຄວາມເປັນຈິງແລ້ວ ໃນມຸມມອງຂອງເຮົາ ພາລະກິດນັ້ນແມ່ນມີຄ່າທີ່ສຸດ ແລະ ມີຄວາມໝາຍທີ່ສຸດ. (ສິ່ງນີ້ໝາຍເຖິງພາລະກິດທີ່ຖືກປະຕິບັດໃນລະຫວ່າງການບັງເກີດເປັນມະນຸດທັງສອງຄັ້ງທັງສິ້ນ; ເພາະ

ເຮົາຕ້ອງການເປີດເຜີຍອຳນາດຂອງເຮົາ, ເຮົາຕ້ອງກາຍມາເປັນເນື້ອໜັງເພື່ອເຮັດໃຫ້ພາລະກິດຂອງເຮົາສຳເລັດ). ເຫດຜົນທີ່ເຮົາເວົ້າວ່າ ພຣະວິນຍານຂອງເຮົາມາເພື່ອປະຕິບັດພາລະກິດເປັນການສ່ວນຕົວກໍຄື ພາລະກິດຂອງເຮົາຖືກເຮັດໃຫ້ສຳເລັດໃນເນື້ອໜັງ. ນັ້ນໝາຍຄວາມວ່າ ລູກຊາຍກົກຂອງເຮົາ ແລະ ເຮົາເລີ່ມເຂົ້າສູ່ການພັກຜ່ອນ. ສົງຄາມກັບຊາຕານທີ່ຢູ່ໃນເນື້ອໜັງແມ່ນດຸເດືອດຫຼາຍກວ່າສົງຄາມກັບຊາຕານທີ່ຢູ່ໃນໂລກຝ່າຍວິນຍານ; ມະນຸດທຸກຄົນສາມາດເຫັນມັນໄດ້, ສະນັ້ນ ແມ່ນແຕ່ເຊື້ອສາຍຂອງຊາຕານກໍສາມາດເປັນພະຍານທີ່ສວຍງາມໃຫ້ແກ່ເຮົາໄດ້ ແລະ ບໍ່ເຕັມໃຈທີ່ຈະຈາກໄປ; ນີ້ແມ່ນຄວາມໝາຍໃນຕົວມັນເອງເຊິ່ງກ່ຽວກັບການປະຕິບັດພາລະກິດໃນເນື້ອໜັງ. ຫຼັກໆແລ້ວມັນແມ່ນເພື່ອເຮັດໃຫ້ເຊື້ອສາຍຂອງມານຮ້າຍເຮັດໃຫ້ມານຮ້າຍເອງເສື່ອມເສຍຊື່ສຽງ; ນີ້ແມ່ນຄວາມອັບອາຍທີ່ມີພະລັງທີ່ສຸດທີ່ຈະເກີດຂຶ້ນກັບຊາຕານຜູ້ຊົ່ວຮ້າຍ, ມີພະລັງຫຼາຍຈົນມັນບໍ່ມີບ່ອນໃຫ້ເຊື່ອງຄວາມອັບອາຍຂອງມັນ ແລະ ອ້ອນວອນຂໍຄວາມເມດຕາຢູ່ຕໍ່ໜ້າເຮົາຊ້ຳແລ້ວຊ້ຳອີກ. ເຮົາໄດ້ຊະນະແລ້ວ, ເຮົາມີໄຊເໜືອທຸກສິ່ງ, ເຮົາໄດ້ທະລຸຜ່ານສະຫວັນຊັ້ນສາມ ແລະ ໄປເຖິງພູຊີໂອນເພື່ອຮັບເອົາຄວາມຜາສຸກແບບຄອບຄົວຮ່ວມກັນກັບລູກຊາຍກົກຂອງເຮົາ, ເພື່ອຈົດຈໍ່ກັບງານລ້ຽງທີ່ຍິ່ງໃຫຍ່ໃນອານາຈັກສະຫວັນຕະຫຼອດໄປ!

ສຳລັບລູກຊາຍກົກ, ເຮົາໄດ້ຈ່າຍທຸກລາຄາ ແລະ ໄດ້ຮັບເອົາຄວາມເຈັບປວດທັງໝົດໃນຄວາມພະຍາຍາມຂອງເຮົາ. (ມະນຸດພຽງແຕ່ບໍ່ຮູ້ເຖິງທຸກສິ່ງທີ່ເຮົາໄດ້ເຮັດ, ທຸກສິ່ງທີ່ເຮົາໄດ້ເວົ້າ, ຂໍ້ແທ້ຈິງທີ່ເຮົາໄດ້ເຫັນຜ່ານວິນຍານຊົ່ວຮ້າຍທຸກປະເພດ ແລະ ຂໍ້ແທ້ຈິງທີ່ເຮົາໄດ້ເນລະເທດຜູ້ໃຫ້ບໍລິການທຸກປະເພດ ນັ້ນກໍຄື ມັນລ້ວນແລ້ວແຕ່ເພື່ອເຫັນແກ່ລູກຊາຍກົກ). ແຕ່ພາຍໃນພາລະກິດຫຼາຍຢ່າງຂອງເຮົາ, ການຈັດແຈງຂອງເຮົາເປັນລະບົບລະບຽບ; ແນ່ນອນ ພາລະກິດບໍ່ໄດ້ຖືກດຳເນີນຢ່າງຫຼັບຫູຫຼັບຕາ. ໃນພຣະທຳຂອງເຮົາໃນແຕ່ລະມື້, ພວກເຈົ້າຄວນທີ່ຈະສາມາດເຫັນເຖິງວິທີການແຫ່ງພາລະກິດຂອງເຮົາ ແລະ ບາດກ້າວຂອງພາລະກິດນັ້ນ; ໃນການກະທຳຂອງເຮົາໃນແຕ່ລະມື້, ພວກເຈົ້າຄວນເຫັນເຖິງສະຕິປັນຍາຂອງເຮົາ ແລະ ຫຼັກການຂອງເຮົາໃນການຈັດການກັບເລື່ອງຕ່າງໆ. ດັ່ງທີ່ເຮົາໄດ້ເວົ້າຊາຕານໄດ້ສົ່ງຄົນທີ່ໃຫ້ບໍລິການມາຫາເຮົາເພື່ອຈຸດປະສົງທີ່ຈະກໍ່ກວນການຄຸ້ມຄອງຂອງເຮົາ. ຜູ້ໃຫ້ບໍລິການເຫຼົ່ານີ້ເປັນຫຍ້າເຂົ້ານົກ, ແຕ່ຄຳວ່າ “ເຂົ້າດີ” ບໍ່ໄດ້ໝາຍເຖິງລູກຊາຍກົກ, ແຕ່ໝາຍເຖິງລູກຊາຍ ແລະ ປະຊາຊົນທຸກຄົນທີ່ບໍ່ແມ່ນລູກຊາຍກົກ. “ເຂົ້າດີກໍຈະເປັນເຂົ້າດີຢູ່ສະເໝີ, ຫຍ້າເຂົ້ານົກກໍຈະເປັນຫຍ້າເຂົ້ານົກຢູ່ສະເໝີ”; ນີ້ໝາຍຄວາມວ່າ ທຳມະຊາດຂອງຄົນທີ່ເປັນຂອງຊາຕານແມ່ນບໍ່ສາມາດປ່ຽນແປງໄດ້ຈັກເທື່ອ. ສະນັ້ນ ສະຫຼຸບແລ້ວກໍຄື ພວກເຂົາຍັງຄົງເປັນຊາຕານ. “ເຂົ້າດີ” ໝາຍເຖິງລູກຊາຍ ແລະ ປະຊາຊົນ, ເພາະເຮົາປູກຝັງຄຸນລັກສະນະຂອງເຮົາເຂົ້າໃນຜູ້ຄົນເຫຼົ່ານີ້ກ່ອນການເນລະມິດສ້າງໂລກ. ເຮົາໄດ້ເວົ້າແລ້ວວ່າ ທຳມະຊາດຂອງມະນຸດບໍ່ປ່ຽນແປງ ແລະ ນັ້ນຄືເຫດຜົນທີ່ເຂົ້າດີຈະເປັນເຂົ້າດີຢູ່ສະເໝີ. ແລ້ວສະນັ້ນ ລູກຊາຍກົກແມ່ນຫຍັງ? ລູກຊາຍກົກມາຈາກເຮົາ; ພວກເຂົາບໍ່ໄດ້ຖືກສ້າງໂດຍເຮົາ, ສະນັ້ນ ພວກເຂົາບໍ່ສາມາດຖືກເອີ້ນວ່າເຂົ້າດີໄດ້ (ຍ້ອນການກ່າວເຖິງເຂົ້າດີແມ່ນເຊື່ອມໂຍງກັບຄຳວ່າ “ຫວ່ານ” ຢູ່ສະເໝີ ແລະ “ການຫວ່ານ” ໝາຍເຖິງ “ການສ້າງ”; ຫຍ້າເຂົ້ານົກທັງໝົດ

ແມ່ນຖືກຫວ່ານໂດຍຊາຕານຢ່າງລັບໆ, ເພື່ອເຮັດໜ້າທີ່ເປັນຜູ້ໃຫ້ບໍລິການ). ຄົນໃດໜຶ່ງພຽງແຕ່ສາມາດເວົ້າວ່າ ລູກຊາຍກົກແມ່ນການສະແດງອອກທີ່ຄົບຖ້ວນ ແລະ ອຸດົມສົມບູນຂອງຕົວຕົນຂອງເຮົາ; ທອງຄຳ ແລະ ເງິນ ແລະ ຫີນລ້ຳຄ່າຄວນເປັນຕົວແທນໃຫ້ກັບພວກເຂົາ. ສິ່ງນີ້ກ່ຽວພັນກັບຂໍ້ແທ້ຈິງທີ່ວ່າ ການມາເຖິງຂອງເຮົາເປັນຄືກັບຂະໂມຍ ແລະ ເຮົາໄດ້ມາເພື່ອລັກທອງຄຳ ແລະ ເງິນ ແລະ ຫີນລ້ຳຄ່າ (ຍ້ອນທອງຄຳ ແລະ ເງິນນີ້ ແລະ ຫີນລ້ຳຄ່າເຫຼົ່ານີ້ເປັນຂອງເຮົາຕັ້ງແຕ່ຕົ້ນເດີມ ແລະ ເຮົາຕ້ອງການເອົາພວກມັນກັບຄືນມາສູ່ເຮືອນຂອງເຮົາ). ເມື່ອລູກຊາຍກົກ ແລະ ເຮົາກັບຄືນສູ່ຊີໂອນຮ່ວມກັນ, ທອງຄຳນີ້, ເງິນນີ້ ແລະ ຫີນລ້ຳຄ່າເຫຼົ່ານີ້ຈະຖືກລັກໂດຍເຮົາ. ໃນຊ່ວງເວລານີ້, ມັນຈະມີການຂັດຂວາງ ແລະ ການລົບກວນໂດຍຊາຕານ ແລະ ດ້ວຍເຫດນັ້ນ ເຮົາຈະເອົາທອງຄຳ, ເງິນ ແລະ ຫີນລ້ຳຄ່າ ແລະ ເລີ່ມຕົ້ນການສູ້ຮົບທີ່ຊີ້ຂາດກັບຊາຕານ. (ໃນທີ່ນີ້ ເຮົາບໍ່ໄດ້ກຳລັງເລົ່າເລື່ອງຢ່າງແນ່ນອນ; ນີ້ແມ່ນເຫດການໃນໂລກຝ່າຍວິນຍານ, ສະນັ້ນ ຜູ້ຄົນກໍຂ້ອນຂ້າງບໍ່ຊັດເຈນກ່ຽວກັບມັນ ແລະ ພຽງແຕ່ສາມາດຟັງມັນຄືກັບເລື່ອງເລົ່າ. ແຕ່ມັນແມ່ນພວກເຈົ້າທີ່ຈະເຫັນຈາກພຣະທຳຂອງເຮົາວ່າ ແຜນການຄຸ້ມຄອງຫົກພັນປີຂອງເຮົາແມ່ນຫຍັງ ແລະ ພວກເຈົ້າຕ້ອງບໍ່ຖືວ່າມັນເປັນເລື່ອງຕະຫຼົກຢ່າງເດັດຂາດ. ບໍ່ດັ່ງນັ້ນ ພຣະວິນຍານຂອງເຮົາຈະອອກຈາກມະນຸດທັງໝົດ). ມື້ນີ້ ການສູ້ຮົບນີ້ລ່ວງລັບໄປແລ້ວ ແລະ ເຮົາຈະນຳລູກຊາຍກົກຂອງເຮົາ (ນຳທອງຄຳ, ເງິນ ແລະ ຫີນລ້ຳຄ່າທີ່ເປັນຂອງເຮົາ) ກັບຄືນສູ່ພູຊີໂອນຂອງເຮົາຮ່ວມກັບເຮົາ. ຍ້ອນການຂາດແຄນທອງຄຳ, ເງິນ ແລະ ຫີນລ້ຳຄ່າ ແລະ ຍ້ອນຄວາມລ້ຳຄ່າຂອງພວກມັນ, ຊາຕານພະຍາຍາມທຸກວິທີທາງທີ່ສາມາດເຮັດໄດ້ເພື່ອຍາດຊິງເອົາພວກມັນໄປ, ແຕ່ເຮົາເວົ້າຄັ້ງແລ້ວຄັ້ງເລົ່າວ່າ ສິ່ງທີ່ມາຈາກເຮົາຕ້ອງກັບຄືນມາຫາເຮົາ ເຊິ່ງເປັນຄວາມໝາຍຂອງສິ່ງທີ່ກ່າວເຖິງຂ້າງເທິງ. ການທີ່ເຮົາເວົ້າວ່າ ລູກຊາຍກົກມາຈາກເຮົາ ແລະ ເປັນຂອງເຮົາແມ່ນການປະກາດຕໍ່ຊາຕານ. ບໍ່ມີຜູ້ໃດເຂົ້າໃຈສິ່ງນີ້ ແລະ ມັນເປັນເຫດການໃນໂລກຝ່າຍວິນຍານທັງສິ້ນ. ສະນັ້ນ ມະນຸດບໍ່ເຂົ້າໃຈວ່າ ເປັນຫຍັງເຮົາຈຶ່ງເນັ້ນຢ້ຳຊ້ຳແລ້ວຊ້ຳອີກວ່າ ລູກຊາຍກົກເປັນຂອງເຮົາ; ມື້ນີ້ ພວກເຈົ້າຄວນເຂົ້າໃຈ! ເຮົາໄດ້ເວົ້າວ່າ ພຣະທຳຂອງເຮົາມີຈຸດປະສົງ ແລະ ສະຕິປັນຍາ, ແຕ່ພວກເຈົ້າພຽງແຕ່ເຂົ້າໃຈສິ່ງນີ້ຢູ່ໃນພາຍນອກ ນັ້ນກໍຄື ບໍ່ມີຜູ້ໃດສາມາດເຫັນໄດ້ຢ່າງຊັດເຈນເຖິງສິ່ງນີ້ທີ່ຢູ່ໃນວິນຍານ.

ເຮົາເວົ້າຫຼາຍຂຶ້ນເລື້ອຍໆ ແລະ ຍິ່ງເຮົາເວົ້າຫຼາຍສໍ່າໃດ ພຣະທຳຂອງເຮົາກໍຍິ່ງເຂັ້ມງວດຫຼາຍສໍ່ານັ້ນ. ເມື່ອມັນມາເຖິງລະດັບໃດໜຶ່ງ, ເຮົາຈະໃຊ້ພຣະທຳຂອງເຮົາເພື່ອປະຕິບັດກັບຜູ້ຄົນຈົນເຖິງລະດັບໃດໜຶ່ງ, ບໍ່ແມ່ນເພື່ອເຮັດໃຫ້ຜູ້ຄົນເຊື່ອໝັ້ນດ້ວຍໃຈ ແລະ ດ້ວຍຄຳເວົ້າເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນ ເພື່ອເຮັດໃຫ້ພວກເຂົາວົນວຽນໄປມາລະຫວ່າງຊີວິດ ແລະ ຄວາມຕາຍ; ນີ້ແມ່ນວິທີການແຫ່ງພາລະກິດຂອງເຮົາ ແລະ ວິທີທີ່ພາລະກິດຂອງເຮົາດຳເນີນຕາມບາດກ້າວຂອງມັນ. ມັນຕ້ອງເປັນແບບນັ້ນ; ມີພຽງແຕ່ແບບນັ້ນ ມັນຈຶ່ງສາມາດເຮັດໃຫ້ຊາຕານອັບອາຍ ແລະ ເຮັດໃຫ້ລູກຊາຍກົກສົມບູນ (ໃຊ້ປະໂຫຍດຈາກພຣະທຳຂອງເຮົາເພື່ອເຮັດໃຫ້ລູກຊາຍກົກສົມບູນໃນທີ່ສຸດ, ເພື່ອເຮັດໃຫ້ພວກເຂົາເປັນອິດສະຫຼະຈາກເນື້ອໜັງ ແລະ ເຂົ້າສູ່ໂລກຝ່າຍວິນຍານ). ມະນຸດບໍ່ເຂົ້າໃຈວິທີການ ແລະ ນໍ້າສຽງຂອງພຣະທຳຂອງເຮົາ. ຄວາມເຂົ້າໃຈບາງຢ່າງຈາກການອະທິບາຍຂອງເຮົາຄວນມາເຖິງພວກເຈົ້າທຸກຄົນ

ແລະ ພວກເຈົ້າທຸກຄົນຄວນປະຕິບັດຕາມພຣະທຳຂອງເຮົາເພື່ອເຮັດໃຫ້ພາລະກິດທີ່ພວກເຈົ້າຕ້ອງເຮັດນັ້ນສຳເລັດ. ນີ້ແມ່ນສິ່ງທີ່ເຮົາຝາກຝັງໃຫ້ແກ່ພວກເຈົ້າ. ພວກເຈົ້າຕ້ອງຮູ້ຈັກສິ່ງນີ້ ແລະ ບໍ່ແມ່ນຈາກໂລກພາຍນອກເທົ່ານັ້ນ ແຕ່ທີ່ສຳຄັນໄປກວ່ານັ້ນກໍຄືມາຈາກໂລກຝ່າຍວິນຍານ.

# ບົດທີ 114

ເຮົາໄດ້ສ້າງໂລກຈັກກະວານ; ເຮົາສ້າງພູ, ແມ່ນໍ້າ ແລະ ທຸກສິ່ງ; ເຮົາປັ້ນຈັກກະວານ ແລະ ຂອບສຸດຂອງແຜ່ນດິນໂລກ; ເຮົານໍາພາບັນດາລູກຊາຍຂອງເຮົາ ແລະ ປະຊາຊົນຂອງເຮົາ; ເຮົາສັ່ງການທຸກສິ່ງ ແລະ ທຸກເລື່ອງ. ປັດຈຸບັນນີ້, ເຮົາຈະນໍາພາລູກຊາຍກົກຂອງເຮົາກັບຄືນສູ່ພູຊີໂອນຂອງເຮົາ, ກັບຄືນສູ່ບ່ອນທີ່ເຮົາອາໄສຢູ່ ແລະ ນີ້ຈະເປັນບາດກ້າວສຸດທ້າຍໃນພາລະກິດຂອງເຮົາ. ທັງໝົດທີ່ເຮົາໄດ້ເຮັດໄປ (ທຸກສິ່ງທີ່ສໍາເລັດລົງນັບແຕ່ເວລາການສ້າງຈົນຮອດປັດຈຸບັນ) ແມ່ນເພື່ອຂັ້ນຕອນພາລາລະກິດຂອງເຮົາໃນມື້ນີ້ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນເພື່ອການປົກຄອງໃນມື້ອື່ນ, ອານາຈັກຂອງມື້ອື່ນ ແລະ ເພື່ອເຮົາ ແລະ ລູກຊາຍກົກຂອງເຮົາຈະມີຄວາມສຸກຊົ່ວນິລັນດອນ. ນີ້ແມ່ນເປົ້າໝາຍຂອງເຮົາໃນການສ້າງທຸກສິ່ງ ແລະ ມັນແມ່ນສິ່ງທີ່ເຮົາຈະບັນລຸໃນທີ່ສຸດຜ່ານການສ້າງຂອງເຮົາ. ມີຈຸດປະສົງ ແລະ ແຜນການຕໍ່ສິ່ງທີ່ເຮົາກ່າວ ແລະ ກະທໍາ; ບໍ່ມີຫຍັງສໍາເລັດລົງໂດຍບັງເອີນ. ເຖິງແມ່ນເຮົາເວົ້າວ່າ ທຸກສິ່ງເປັນອິດສະຫຼະ ແລະ ມີເສລີພາບ ເມື່ອຢູ່ກັບເຮົາ, ເຖິງຢ່າງໃດກໍຕາມ ທຸກສິ່ງທີ່ເຮົາເຮັດແມ່ນມີຫຼັກການ, ທຸກສິ່ງທີ່ເຮົາເຮັດແມ່ນອີງຕາມສະຕິປັນຍາ ແລະ ອຸປະນິໄສຂອງເຮົາ. ພວກເຈົ້າມີຄວາມເຂົ້າໃຈກ່ຽວກັບເລື່ອງນີ້ບໍ? ນັບແຕ່ເວລາການສ້າງຈົນຮອດປັດຈຸບັນ, ນອກຈາກລູກຊາຍກົກຂອງເຮົາ, ບໍ່ມີໃຜໄດ້ມາຮູ້ຈັກເຮົາ ແລະ ບໍ່ມີໃຜໄດ້ເຫັນໃບໜ້າທີ່ແທ້ຈິງຂອງເຮົາ. ເຮົາໄດ້ສ້າງຂໍ້ຍົກເວັ້ນຂຶ້ນສໍາລັບລູກຊາຍກົກຂອງເຮົາກໍຍ້ອນວ່າແທ້ຈິງແລ້ວ ພວກເຂົາແມ່ນພາກສ່ວນໜຶ່ງຂອງຕົວຕົນຂອງເຮົາ.

ເມື່ອເຮົາສ້າງໂລກ, ເຮົາໄດ້ແບ່ງມະນຸດອອກເປັນສີ່ປະເພດຕາມຄວາມຕ້ອງການຂອງເຮົາ ເຊິ່ງມີ: ລູກຊາຍຂອງເຮົາ, ປະຊາຊົນຂອງເຮົາ, ບັນດາຜູ້ໃຫ້ບໍລິການ ແລະ ບັນດາຜູ້ທີ່ຈະຖືກທໍາລາຍ. ເປັນຫຍັງລູກຊາຍກົກຂອງເຮົາຈຶ່ງບໍ່ໄດ້ຖືກລວມເຂົ້າໃນລາຍການນີ້? ມັນກໍຍ້ອນວ່າລູກຊາຍກົກຂອງເຮົາບໍ່ແມ່ນສິ່ງມີຊີວິດຈາກການຊົງສ້າງ; ພວກເຂົາມາຈາກເຮົາ ແລະ ບໍ່ໄດ້ມາຈາກມະນຸດ. ເຮົາໄດ້ຈັດແຈງໄວ້ສໍາລັບລູກຊາຍກົກຂອງເຮົາກ່ອນທີ່ເຮົາກາຍເປັນເນື້ອໜັງ; ຄືວເຮືອນໃດທີ່ພວກເຂົາຈະໄປເກີດ ແລະ ໃຜຈະຢູ່ທີ່ນັ້ນເພື່ອຮັບໃຊ້ພວກເຂົາ, ສິ່ງທັງໝົດນີ້ໄດ້ຖືກວາງແຜນໄວ້ໂດຍເຮົາ. ເຮົາຍັງໄດ້ວາງແຜນໄວ້ວ່າໃຜໃນພວກເຂົາຈະຖືກເຮົາຮັບຄືນໃນເວລາໃດ. ໃນສຸດທ້າຍ, ພວກເຮົາຈະກັບຄືນສູ່ຊີໂອນພ້ອມກັນ. ທັງໝົດນີ້ໄດ້ຖືກວາງແຜນໄວ້ແຕ່ກ່ອນການຊົງສ້າງ, ດັ່ງນັ້ນ ບໍ່ມີມະນຸດຄົນໃດຮູ້ຈັກມັນ ແລະ ມັນບໍ່ໄດ້ຖືກບັນທຶກໄວ້ໃນປຶ້ມເຫຼັ້ມໃດ ຍ້ອນວ່ານີ້ແມ່ນເລື່ອງຂອງຊີໂອນ. ຍິ່ງໄປກວ່ານັ້ນ, ເມື່ອເຮົາກາຍເປັນເນື້ອໜັງ, ເຮົາບໍ່ໄດ້ໃຫ້ຄວາມສາມາດນີ້ແກ່ມະນຸດ, ເພາະສະນັ້ນຈຶ່ງບໍ່ມີໃຜຮູ້ສິ່ງເຫຼົ່ານີ້. ເມື່ອພວກເຈົ້າກັບຄືນສູ່ຊີໂອນ, ພວກເຈົ້າຈະຮູ້ວ່າພວກເຈົ້າເປັນແນວໃດໃນອະດີດ, ພວກເຈົ້າເປັນແນວໃດໃນຕອນນີ້ ແລະ ສິ່ງທີ່ພວກເຈົ້າເຮັດໃນຊີວິດນີ້. ຕອນນີ້ ເຮົາພຽງແຕ່ບອກສິ່ງເຫຼົ່ານີ້ແກ່ພວກເຈົ້າຢ່າງແຈ່ມແຈ້ງ ແລະ ເທື່ອລະເລັກລະໜ້ອຍ, ບໍ່ດັ່ງນັ້ນພວກເຈົ້າກໍຈະບໍ່ເຂົ້າໃຈ, ບໍ່ວ່າພວກເຈົ້າພະຍາຍາມຫຼາຍປານໃດກໍຕາມ ແລະ ພວກເຈົ້າຈະຂັດຂວາງການຄຸ້ມຄອງຂອງເຮົາ. ມື້ນີ້, ເຖິງແມ່ນວ່າ

ເຮົາຖືກແຍກອອກຈາກລູກຊາຍກົກສ່ວນໃຫຍ່ຂອງເຮົາໃນແງ່ຂອງເນື້ອໜັງ, ພວກເຮົາມີພຣະວິນຍານອັນດຽວກັນ ແລະ ໃນຂະນະທີ່ຮູບລັກສະນະທາງຮ່າງກາຍຂອງພວກເຈົ້າອາດຈະແຕກຕ່າງກັນ, ພວກເຮົາກໍເປັນພຣະວິນຍານອັນດຽວກັນແຕ່ຕົ້ນຈົນຈົບ. ແນວໃດກໍຕາມ, ເຊື້ອສາຍຂອງຊາຕານຕ້ອງບໍ່ໃຊ້ສິ່ງນີ້ເປັນໂອກາດໃນການຫາຜົນປະໂຫຍດ. ບໍ່ວ່າເຈົ້າຈະປອມຕົວແນວໃດ, ມັນກໍຍັງຄົງເປັນເລື່ອງໃນລະດັບຜິວເຜີນຢູ່ ແລະ ເຮົາກໍຈະບໍ່ຮອງຮັບ. ເພາະສະນັ້ນ, ຄົນໆໜຶ່ງສາມາດເຫັນໄດ້ຈາກສິ່ງນີ້ວ່າບັນດາຜູ້ທີ່ເນັ້ນໃສ່ເລື່ອງໃນລະດັບຜິວເຜີນ ແລະ ສະແຫວງຫາທີ່ຈະຮຽນແບບເຮົາທາງພາຍນອກນັ້ນແມ່ນຊາຕານຮ້ອຍເປີເຊັນແນ່ນອນ. ຍ້ອນວ່າວິນຍານຂອງພວກເຂົາແຕກຕ່າງ ແລະ ພວກເຂົາບໍ່ແມ່ນທີ່ຮັກຂອງເຮົາ, ບໍ່ວ່າພວກເຂົາຈະຮຽນແບບເຮົາແນວໃດກໍຕາມ, ພວກເຂົາບໍ່ມີຫຍັງທີ່ຄືເຮົາເລີຍ. ຍິ່ງໄປກວ່ານັ້ນ, ຍ້ອນວ່າລູກຊາຍກົກຂອງເຮົາມີພຣະວິນຍານອັນດຽວກັບເຮົາແທ້ໆແລ້ວ, ເຖິງແມ່ນວ່າພວກເຂົາບໍ່ຮຽນແບບເຮົາ, ພວກເຂົາກໍ່ເວົ້າ ແລະ ປະຕິບັດແບບດຽວກັບເຮົາ ແລະ ພວກເຂົາທັງໝົດຊື່ສັດ, ບໍລິສຸດ ແລະ ເປີດເຜີຍ (ຄົນເຫຼົ່ານັ້ນຂາດສະຕິປັນຍາ ຍ້ອນປະສົບການທີ່ຈຳກັດຂອງພວກເຂົາຢູ່ໃນໂລກ, ເພາະສະນັ້ນ ການຂາດສະຕິປັນຍາບໍ່ແມ່ນຂໍ້ບົກຜ່ອງໃນລູກຊາຍກົກຂອງເຮົາ; ເມື່ອພວກເຂົາກັບຄືນສູ່ຮ່າງກາຍ, ທຸກຢ່າງຈະຖືກຕ້ອງ). ດັ່ງນັ້ນ, ຍ້ອນເຫດຜົນທີ່ໄດ້ອະທິບາຍໄວ້ຂ້າງເທິງນີ້ ຄົນສ່ວນຫຼາຍຈຶ່ງຍັງບໍ່ປ່ຽນແປງທຳມະຊາດເດີມຂອງພວກເຂົາ ບໍ່ວ່າເຮົາຈະຈັດການພວກເຂົາແນວໃດກໍຕາມ. ແຕ່ລູກຊາຍກົກຂອງເຮົາປະຕິບັດຕາມຄວາມປະສົງຂອງເຮົາໂດຍທີ່ເຮົາບໍ່ຕ້ອງຈັດການກັບພວກເຂົາ. ນີ້ກໍ່ຍ້ອນວ່າພວກເຂົາມີພຣະວິນຍານອັນດຽວກັນ. ພວກເຂົາຮູ້ສຶກໃນວິນຍານຂອງພວກເຂົາເຖິງຄວາມເຕັມໃຈທີ່ຈະເສຍສະຫຼະໃຫ້ແກ່ເຮົາທັງໝົດ. ດັ່ງນັ້ນ, ນອກຈາກລູກຊາຍກົກຂອງເຮົາແລ້ວ, ບໍ່ມີໃຜທີ່ຄຳນຶງເຖິງຄວາມປະສົງຂອງເຮົາຢ່າງແທ້ຈິງ ແລະ ຢ່າງຈິງໃຈ; ຫຼັງຈາກທີ່ເຮົາເອົາຊະນະຊາຕານເທົ່ານັ້ນ ພວກເຂົາກໍເຕັມໃຈທີ່ຈະຮັບໃຊ້ເຮົາ.

ສະຕິປັນຍາຂອງເຮົາ ແລະ ລູກຊາຍກົກຂອງເຮົາຢືນຢູ່ເໜືອທຸກສິ່ງ ແລະ ເອົາຊະນະທຸກຢ່າງ ແລະ ບໍ່ມີສິ່ງໃດ ຫຼື ຄົນໃດ ຫຼື ເລື່ອງໃດກ້າຢືນຂວາງທາງ. ຍິ່ງໄປກວ່ານັ້ນ, ບໍ່ມີຄົນໃດ, ເລື່ອງໃດ ຫຼື ສິ່ງໃດທີ່ສາມາດຢູ່ເໜືອພວກເຂົາໄດ້ ແລະ ກົງກັນຂ້າມ ທັງໝົດຈະຍອມຕໍ່ຕົວຕົນຂອງເຮົາຢ່າງເຊື່ອຟັງ. ນີ້ແມ່ນຄວາມຈິງທີ່ເກີດຂຶ້ນຕໍ່ຕາຄົນໆໜຶ່ງ ແລະ ເປັນຄວາມຈິງທີ່ເຮົາບັນລຸແລ້ວ. ໃຜກໍຕາມທີ່ຍັງຄົງຢູ່ໃນຄວາມບໍ່ເຊື່ອຟັງ (ບັນດາຜູ້ທີ່ບໍ່ເຊື່ອຟັງຍັງໝາຍເຖິງຊາຕານ ແລະ ບັນດາຜູ້ທີ່ຖືກຄອບງຳໂດຍຊາຕານກໍເປັນຊາຕານໂດຍບໍ່ຕ້ອງສົງໄສ), ເຮົາຈະທຳລາຍພວກເຂົາແບບຖອດຮາກ ແລະ ກົ່ງ ເພື່ອວ່າຈະບໍ່ມີບັນຫາໃນອະນາຄົດ; ພວກເຂົາຈະຕາຍທັນທີຈາກການຂ້ຽນຕີຂອງເຮົາ. ຊາຕານປະເພດນີ້ແມ່ນບັນດາຜູ້ທີ່ບໍ່ເຕັມໃຈທີ່ຈະໃຫ້ບໍລິການແກ່ເຮົາ. ຄົນເຫຼົ່ານີ້ຢືນຕໍ່ຕ້ານເຮົາຢ່າງດື້ດ້ານນັບແຕ່ການຊົງສ້າງ ແລະ ມື້ນີ້ພວກເຂົາຍັງຄົງບໍ່ເຊື່ອຟັງເຮົາ. (ຜູ້ຄົນບໍ່ສາມາດເຫັນສິ່ງນີ້ ຍ້ອນມັນເປັນພຽງເລື່ອງທີ່ກ່ຽວກັບວິນຍານ. ຄົນປະເພດນີ້ເປັນຕົວແທນໃຫ້ກັບຊາຕານປະເພດນີ້). ເຮົາຈະທຳລາຍພວກເຂົາ ກ່ອນທີ່ທຸກສິ່ງອື່ນຈະກຽມພ້ອມ, ປ່ອຍໃຫ້ພວກເຂົາໄດ້ຮັບວິໄນແຫ່ງການລົງໂທດຢ່າງຮຸນແຮງຕະຫຼອດໄປ. ("ທຳລາຍ" ຢູ່ນີ້ບໍ່ໄດ້ໝາຍຄວາມວ່າ "ເຮັດໃຫ້ພວກເຂົາບໍ່ມີຢູ່ອີກຕໍ່ໄປ", ແຕ່ກົງກັນຂ້າມ ມັນໝາຍ

ເຖິງຂອບເຂດຂອງຄວາມໂຫດຮ້າຍທີ່ພວກເຂົາຈະຕ້ອງໄດ້ຮັບ. ຄຳວ່າ "ທຳລາຍ" ໃນທີ່ນີ້ແຕກຕ່າງຈາກຄຳວ່າ "ທຳລາຍ" ທີ່ໃຊ້ສຳລັບບັນດາຜູ້ທີ່ຈະຖືກທຳລາຍ). ພວກເຂົາຈະຮ້ອງໄຫ້ ແລະ ກັດແຂ້ວຂອງພວກເຂົາຊົ່ວນິດນິລັນໂດຍບໍ່ມີທີ່ສິ້ນສຸດ. ທ້າຍທີ່ສຸດແລ້ວ ຈິນຕະນາການຂອງມະນຸດກໍ່ບໍ່ສາມາດນຶກເຫັນພາບຂອງສາກນັ້ນໄດ້. ດ້ວຍຄວາມຄິດຂອງມະນຸດ, ພວກເຂົາບໍ່ສາມາດຄິດເຖິງສິ່ງຕ່າງໆຝ່າຍວິນຍານໄດ້ ແລະ ສະນັ້ນ ມີຫຼາຍສິ່ງທີ່ພວກເຈົ້າຈະເຂົ້າໃຈຫຼັງຈາກທີ່ກັບຄືນສູ່ຊີໂອນເທົ່ານັ້ນ.

ໃນເຮືອນໃນອະນາຄົດຂອງເຮົາ, ຈະບໍ່ມີໃຜນອກຈາກລູກຊາຍກົກຂອງເຮົາ ແລະ ເຮົາ ແລະ ມີພຽງແຕ່ເວລານັ້ນເທົ່ານັ້ນ ເປົ້າໝາຍຂອງເຮົາຈະຖືກບັນລຸ ແລະ ແຜນການຂອງເຮົາຈະເກີດໝາກຜົນຢ່າງເຕັມທີ່, ຍ້ອນທັງໝົດຈະກັບຄືນສູ່ສະພາບເດີມຂອງມັນ ແລະ ທັງໝົດຈະຖືກແບ່ງອອກຕາມປະເພດຂອງມັນ. ລູກຊາຍກົກຂອງເຮົາຈະເປັນຂອງເຮົາ, ລູກຊາຍ ແລະ ປະຊາຊົນຂອງເຮົາຈະຢູ່ໃນບັນດາສິ່ງມີຊີວິດທີ່ຖືກສ້າງຂຶ້ນ ແລະ ຜູ້ໃຫ້ບໍລິການ ແລະ ຜູ້ທີ່ຖືກທຳລາຍຈະເປັນຂອງຊາຕານ. ຫຼັງຈາກພິພາກສາໂລກ, ເຮົາ ແລະ ລູກຊາຍກົກຂອງເຮົາຈະເລີ່ມຕົ້ນຊີວິດສັກສິດອີກຄັ້ງໜຶ່ງ ແລະ ພວກເຂົາຈະບໍ່ຈາກເຮົາໄປອີກ ແລະ ຈະຢູ່ຮ່ວມກັນກັບເຮົາສະເໝີໄປ. ຄວາມລຶກລັບທັງໝົດທີ່ຄວາມຄິດມະນຸດສາມາດເຂົ້າໃຈໄດ້ຈະຖືກເປີດເຜີຍອອກມາໃຫ້ແກ່ພວກເຈົ້າເທື່ອລະໜ້ອຍ. ຕະຫຼອດປະຫວັດສາດ, ມີຄົນຈຳນວນນັບບໍ່ຖ້ວນທີ່ມໍລະນາສັກຂີຍ້ອນເຮົາ, ຖວາຍຕົວເອງໃຫ້ແກ່ເຮົາຢ່າງເຕັມປ່ຽມ, ແຕ່ຜູ້ຄົນແມ່ນສິ່ງມີຊີວິດທີ່ຖືກສ້າງຂຶ້ນຕາມຫຼັງສິ່ງອື່ນໃດທັງໝົດ ແລະ ບໍ່ວ່າພວກເຂົາຈະດີປານໃດກໍຕາມ, ພວກເຂົາກໍບໍ່ສາມາດຖືກຈັດປະເພດໃຫ້ເປັນພຣະເຈົ້າໄດ້; ນີ້ແມ່ນຊ່ວງເຫດການທີ່ບໍ່ສາມາດຫຼີກລ້ຽງໄດ້ ແລະ ບໍ່ມີໃຜສາມາດປ່ຽນແປງມັນໄດ້. ໃນທີ່ສຸດແລ້ວ ແມ່ນພຣະເຈົ້າທີ່ສ້າງທຸກສິ່ງ, ໃນຂະນະທີ່ຜູ້ຄົນເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນ, ໃນທີ່ສຸດແລ້ວ ຊາຕານແມ່ນເປົ້າໝາຍແຫ່ງການທຳລາຍລ້າງຂອງເຮົາ ແລະ ສັດຕູທີ່ໜ້າກຽດຊັງຂອງເຮົາ, ນີ້ແມ່ນຄວາມໝາຍທີ່ຈິງແທ້ທີ່ສຸດຂອງຄຳວ່າ "ເຖິງແມ່ນວ່າພູເຂົາ ແລະ ແມ່ນ້ຳອາດຈະປ່ຽນໄປ ແລະ ປ່ຽນແປງ, ທຳມະຊາດຂອງຄົນໆໜຶ່ງຈະບໍ່ປ່ຽນແປງ". ເພື່ອຢູ່ໃນສະພາບນີ້ ແລະ ຂັ້ນຕອນນີ້ໃນຕອນນີ້ເປັນລາງບອກເຫດວ່າເຮົາ ແລະ ລູກຊາຍຂອງເຮົາຈະເຂົ້າສູ່ການພັກຜ່ອນ. ນີ້ກໍຍ້ອນວ່າ ພາລະກິດຂອງເຮົາໃນໂລກນັ້ນສຳເລັດລົງຢ່າງຄົບຖ້ວນ ແລະ ບາດກ້າວຕໍ່ໄປຂອງພາລະກິດຂອງເຮົາຈະຮຽກຮ້ອງໃຫ້ເຮົາກັບຄືນສູ່ຮ່າງກາຍເພື່ອເຮັດໃຫ້ມັນສຳເລັດໄປ. ສິ່ງເຫຼົ່ານີ້ແມ່ນບາດກ້າວພາລະກິດຂອງເຮົາ ເຊິ່ງເຮົາໄດ້ວາງແຜນໄວ້ດົນນານມາແລ້ວ. ປະເດັນນີ້ຕ້ອງຖືກເຫັນຢ່າງຊັດເຈນ, ບໍ່ດັ່ງນັ້ນ ຄົນສ່ວນໃຫຍ່ຈະລະເມີດບົດບັນຍັດການປົກຄອງຂອງເຮົາ.

# ບົດທີ 115

ຍ້ອນເຈົ້າ, ຫົວໃຈຂອງເຮົາຈະປິຕິຍິນດີເປັນຢ່າງຍິ່ງ; ຍ້ອນເຈົ້າ, ມືຂອງເຮົາຈະຟ້ອນລຳຢ່າງມີຄວາມສຸກ ແລະ ເຮົາຈະປະທານພອນອັນບໍ່ສິ້ນສຸດໃຫ້ແກ່ເຈົ້າ, ຍ້ອນວ່າເຈົ້າມາຈາກເຮົາກ່ອນເວລາແຫ່ງການສ້າງ. ມື້ນີ້ເຈົ້າຕ້ອງກັບຄືນມາຢູ່ຂ້າງໆເຮົາ, ຍ້ອນວ່າເຈົ້າບໍ່ແມ່ນຂອງໂລກ ຫຼື ແຜ່ນດິນໂລກ, ແຕ່ເປັນຂອງເຮົາ. ເຮົາຈະຮັກເຈົ້າຕະຫຼອດໄປ, ເຮົາຈະອວຍພອນເຈົ້າຕະຫຼອດໄປ ແລະ ເຮົາຈະປົກປ້ອງເຈົ້າຕະຫຼອດໄປ. ມີພຽງຜູ້ທີ່ມາຈາກເຮົາເທົ່ານັ້ນທີ່ຮູ້ຄວາມປະສົງຂອງເຮົາ; ມີພຽງແຕ່ພວກເຂົາເທົ່ານັ້ນທີ່ຈະຄຳນຶງເຖິງພາລະຂອງເຮົາ ແລະ ມີພຽງແຕ່ພວກເຂົາເທົ່ານັ້ນທີ່ຈະເຮັດສິ່ງທີ່ເຮົາຕ້ອງການຢາກເຮັດ. ມື້ນີ້, ທຸກສິ່ງໄດ້ສຳເລັດລົງແລ້ວ. ຫົວໃຈຂອງເຮົາເປັນຄືກັບລູກໄຟ, ປາຖະໜາຢາກໃຫ້ລູກຊາຍທີ່ຮັກຂອງເຮົາກັບມາຢູ່ກັບເຮົາໃນໄວໆນີ້ ແລະ ໃຫ້ຕົວຕົນຂອງເຮົາກັບຄືນສູ່ຊີໂອນໃນໄວໆນີ້. ເຈົ້າມີຄວາມຮູ້ບາງຢ່າງກ່ຽວກັບເລື່ອງນີ້. ເຖິງແມ່ນວ່າພວກເຮົາບໍ່ສາມາດຕິດຕາມກັນໃນວິນຍານ, ພວກເຮົາກໍສາມາດຕິດຕາມກັນໃນວິນຍານ ແລະ ພົບກັນໃນເນື້ອໜັງ. ພຣະບິດາ ແລະ ພຣະບຸດບໍ່ສາມາດແຍກອອກຈາກກັນໄດ້ຕະຫຼອດໄປ; ພວກເຂົາຜູກພັນກັນຢ່າງໃກ້ຊິດ. ບໍ່ມີໃຜສາມາດເອົາເຈົ້າອອກຈາກຂ້າງເຮົາໄດ້ຈົນກວ່າຈະຮອດມື້ທີ່ກັບຄືນສູ່ພູຊີໂອນ. ເຮົາຮັກລູກຊາຍກົກທັງໝົດທີ່ມາຈາກເຮົາ ແລະ ເຮົາຊັງສັດຕູທັງໝົດທີ່ຕໍ່ຕ້ານເຮົາ. ເຮົາຈະນຳເອົາຜູ້ທີ່ເຮົາຮັກກັບຄືນສູ່ຊີໂອນ ແລະ ໂຍນບັນດາຜູ້ທີ່ເຮົາຊັງລົງສູ່ດິນແດນມໍລະນາ, ສູ່ນະຣົກ. ນີ້ແມ່ນຫຼັກການຫຼັກຂອງບົດບັນຍັດການປົກຄອງທັງໝົດຂອງເຮົາ. ທຸກສິ່ງທີ່ລູກຊາຍກົກຂອງເຮົາເວົ້າ ຫຼື ເຮັດແມ່ນການສະແດງອອກຂອງພຣະວິນຍານຂອງເຮົາ. ມັນມີຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບສິ່ງນີ້ທີ່ທຸກຄົນຕ້ອງເປັນພະຍານໃຫ້ແກ່ລູກຊາຍກົກຂອງເຮົາ. ນີ້ແມ່ນບາດກ້າວຕໍ່ໄປຂອງພາລະກິດເຮົາ ແລະ ຖ້າຜູ້ໃດຕໍ່ຕ້ານ, ເຮົາຈະໃຫ້ລູກຊາຍສຸດທີ່ຮັກຂອງເຮົາຈັດການກັບພວກເຂົາເສຍ. ຕອນນີ້ແມ່ນແຕກຕ່າງຈາກເມື່ອກ່ອນ. ຖ້າບັນດາຜູ້ທີ່ເຮົາຮັກກ່າວຄຳຕັດສິນ, ຊາຕານຕາຍໃນນະຣົກທັນທີ, ຍ້ອນວ່າເຮົາໄດ້ມອບສິດອຳນາດໃຫ້ແກ່ລູກຊາຍກົກຂອງເຮົາແລ້ວ. ນີ້ໝາຍຄວາມວ່າ ນັບແຕ່ນີ້ໄປ, ມັນຄືເວລາທີ່ລູກຊາຍກົກຂອງເຮົາ ແລະ ເຮົາທີ່ຈະປົກຄອງຮ່ວມກັນ. (ນີ້ແມ່ນຢູ່ໃນໄລຍະຂອງເນື້ອໜັງ ເຊິ່ງແຕກຕ່າງກັນເລັກນ້ອຍຈາກການປົກຄອງຮ່ວມກັນໃນຮ່າງກາຍ). ໃຜກໍຕາມທີ່ບໍ່ເຊື່ອຟັງໃນຄວາມຄິດກໍຈະປະສົບໂຊກຊະຕາດຽວກັນກັບບັນດາຜູ້ທີ່ຕໍ່ຕ້ານຕົວຕົນທີ່ເຮົາເປັນ. ລູກຊາຍກົກຂອງເຮົາຄວນຖືກປະຕິບັດແບບດຽວກັບທີ່ເຮົາຖືກປະຕິບັດ ຍ້ອນພວກເຮົາມີຮ່າງກາຍອັນດຽວກັນ ແລະ ບໍ່ສາມາດແຍກອອກຈາກກັນໄດ້. ດັ່ງທີ່ພະຍານເກີດຂຶ້ນເພື່ອເຮົາໃນອະດີດ, ມື້ນີ້ ມັນຄວນຈະເກີດຂຶ້ນເພື່ອລູກຊາຍກົກຂອງເຮົາຄືກັນ. ນີ້ແມ່ນໜຶ່ງໃນບົດບັນຍັດການປົກຄອງຂອງເຮົາ; ທຸກຄົນຕ້ອງຢືນຂຶ້ນ ແລະ ເປັນພະຍານ.

ອານາຈັກຂອງເຮົາຂະຫຍາຍອອກໄປຈົນສຸດປາຍແຜ່ນດິນໂລກ ແລະ ລູກຊາຍກົກຂອງເຮົາເດີນທາງໄປກັບເຮົາຈົນສຸດປາຍແຜ່ນດິນໂລກ. ຍ້ອນອຸປະສັກຂອງເນື້ອໜັງພວກເຈົ້າ ກໍມີພຣະທຳຫຼາຍຂໍ້ທີ່ພວກເຈົ້າບໍ່ເຂົ້າໃຈ, ເຖິງແມ່ນວ່າພວກເຮົາຈະໄດ້ກ່າວພຣະທຳເຫຼົ່ານັ້ນອອກມາ, ດັ່ງນັ້ນ

ພາລະກິດສ່ວນໃຫຍ່ຕ້ອງສຳເລັດລົງຫຼັງຈາກທີ່ກັບຄືນສູ່ຊີໂອນ. ມັນສາມາດເຫັນໄດ້ຈາກພຣະທຳຂອງເຮົາວ່າການກັບຄືນມາຄັ້ງນີ້ບໍ່ໄກຫ່າງ, ໃນຄວາມຈິງແລ້ວ ຊ່ວງເວລາເກືອບຈະມາເຖິງແລ້ວ. ນັ້ນຄືເຫດຜົນທີ່ເຮົາກ່າວເຖິງຊີໂອນ ແລະ ເລື່ອງຕ່າງໆໃນຊີໂອນຢູ່ຢ່າງສະໝໍ່າສະເໝີ. ພວກເຈົ້າຮູ້ບໍ່ວ່າຈຸດປະສົງຂອງພຣະທຳຂອງເຮົາແມ່ນຫຍັງ? ພວກເຈົ້າຮູ້ບໍວ່າແມ່ນຫຍັງຢູ່ໃນໃຈເຮົາ? ຫົວໃຈຂອງເຮົາປາຖະໜາທີ່ຈະກັບຄືນຫາຊີໂອນໃນໄວໆນີ້ ເພື່ອສິ້ນສຸດຍຸກສະໄໝເກົ່າທັງປວງ, ເພື່ອສິ້ນສຸດຊີວິດຂອງພວກເຂົາເທິງແຜ່ນດິນໂລກ (ຍ້ອນວ່າເຮົາກຽດຊັງຄົນ, ເລື່ອງລາວ ແລະ ສິ່ງຕ່າງໆເທິງໂລກ ແລະຊັງຊີວິດທີ່ຢູ່ໃນເນື້ອໜັງຫຼາຍຍິ່ງຂຶ້ນ ແລະ ອຸປະສັກຂອງເນື້ອໜັງນັ້ນກໍຍິ່ງໃຫຍ່; ມີແຕ່ເມື່ອກັບຄືນສູ່ຊີໂອນເທົ່ານັ້ນ ທຸກສິ່ງຈຶ່ງຈະຮຸ່ງເຮືອງ) ແລະ ເພື່ອຟື້ນຟູຊີວິດຂອງພວກເຮົາໃນອານາຈັກ. ຈຸດປະສົງຂອງການບັງເກີດເປັນມະນຸດຄັ້ງທຳອິດຂອງເຮົາແມ່ນເພື່ອວາງຮາກຖານສຳລັບຄັ້ງທີສອງຂອງເຮົາ. ນີ້ແມ່ນເສັ້ນທາງທີ່ຕ້ອງໄດ້ເດີນທາງໄປ. ມີພຽງໂດຍການມອບຕົວເຮົາເອງໃຫ້ກັບຊາຕານຢ່າງຄົບຖ້ວນເທົ່ານັ້ນ ເຮົາຈຶ່ງສາມາດໄຖ່ເອົາພວກເຈົ້າໄດ້, ເພື່ອວ່າພວກເຈົ້າອາດຈະກັບເຂົ້າສູ່ຮ່າງກາຍຂອງເຮົາໃນຊ່ວງຂັ້ນຕອນສຸດທ້າຍ. (ຖ້າບໍ່ແມ່ນຍ້ອນການເກີດເປັນມະນຸດຄັ້ງທຳອິດຂອງເຮົາ, ເຮົາກໍຈະບໍ່ສາມາດໄດ້ຮັບສະຫງ່າລາສີ ແລະ ເຮົາກໍຈະບໍ່ສາມາດເອົາເຄື່ອງບູຊາໄຖ່ບາບກັບຄືນມາໄດ້, ດັ່ງນັ້ນ ພວກເຈົ້າກໍຈະເຂົ້າມາໃນໂລກໃນຖານະເປັນຄົນບາບ). ຍ້ອນວ່າເຮົາມີສະຕິປັນຍາທີ່ບໍ່ສິ້ນສຸດ, ຄວາມຈິງທີ່ເຮົາພາພວກເຈົ້າອອກຈາກຊີໂອນນັ້ນກໍໝາຍຄວາມວ່າເຮົາຈະໝັ້ນໃຈທີ່ຈະນຳພວກເຈົ້າກັບຄືນສູ່ຊີໂອນ. ຄວາມພະຍາຍາມຂອງຊາຕານທີ່ຈະປິດກັ້ນເສັ້ນທາງຈະບໍ່ສຳເລັດຜົນ ຍ້ອນວ່າພາລະກິດອັນຍິ່ງໃຫຍ່ຂອງເຮົາໄດ້ສຳເລັດລົງດົນແລ້ວ. ລູກຊາຍກົກຂອງເຮົາເປັນຄືກັນກັບເຮົາ, ພວກເຂົາບໍລິສຸດ ແລະ ບໍ່ມີມົນທິນ, ດັ່ງນັ້ນ ເຮົາຈຶ່ງຈະກັບຄືນເມືອຊີໂອນກັບລູກຊາຍກົກຂອງເຮົາ ແລະ ພວກເຮົາຈະບໍ່ຖືກແຍກຈາກກັນຈັກເທື່ອ.

ແຜນການຄຸ້ມຄອງທັງໝົດຂອງເຮົາໄດ້ຖືກເປີດເຜີຍໃຫ້ແກ່ພວກເຈົ້າເທື່ອລະໜ້ອຍ. ເຮົາໄດ້ເລີ່ມດຳເນີນພາລະກິດຂອງເຮົາໃນທຸກຊົນຊາດ ແລະ ທ່າມກາງທຸກຄົນ. ສິ່ງນີ້ພຽງພໍທີ່ຈະພິສູດວ່າການກັບຄືນສູ່ຊີໂອນນັ້ນບໍ່ໄດ້ໄກເກີນໄປ, ຍ້ອນວ່າການດຳເນີນພາລະກິດຂອງເຮົາໃນທຸກຊົນຊາດ ແລະທ່າມກາງທຸກຄົນແມ່ນສິ່ງທີ່ຕ້ອງສຳເລັດລົງຫຼັງຈາກການກັບຄືນສູ່ຊີໂອນ. ບາດຍ່າງຂອງເຮົາເລີ່ມໄວຂຶ້ນ. (ຍ້ອນວ່າວັນແຫ່ງການກັບຄືນສູ່ຊີໂອນຂອງເຮົານັ້ນໃກ້ເຂົ້າມາແລ້ວ, ເຮົາຕ້ອງການສຳເລັດພາລະກິດຂອງເຮົາເທິງແຜ່ນດິນໂລກກ່ອນເຮົາກັບຄືນ). ເຮົາຍິ່ງຫຍຸ້ງກັບພາລະກິດຂອງເຮົາຫຼາຍຂຶ້ນເລື່ອຍໆ ແລະ ກໍ່ມີພາລະກິດໃຫ້ເຮົາປະຕິບັດເທິງໂລກໜ້ອຍລົງເລື້ອຍໆ, ເກືອບວ່າບໍ່ມີເລີຍ. (ຄວາມຫຍຸ້ງຂອງເຮົາແມ່ນແນໃສ່ພາລະກິດໃນພຣະວິນຍານ ເຊິ່ງມະນຸດບໍ່ສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າ ແຕ່ສາມາດຮວບຮວມໄດ້ຈາກພຣະທຳຂອງເຮົາເທົ່ານັ້ນ; ຄວາມຫຍຸ້ງຂອງເຮົາບໍ່ໄດ້ເປັນຄືກັບການຫຍຸ້ງໃນເນື້ອໜັງ, ແຕ່ໝາຍເຖິງການວາງແຜນຫຼາຍໆໜ້າວຽກຂອງເຮົາ). ດັ່ງທີ່ເຮົາໄດ້ກ່າວ, ນີ້ເປັນຍ້ອນພາລະກິດຂອງເຮົາເທິງແຜ່ນດິນໂລກໄດ້ສຳເລັດລົງຢ່າງຄົບຖ້ວນແລ້ວ ແລະ ພາລະກິດສ່ວນທີ່ເຫຼືອຂອງເຮົາຕ້ອງລໍຖ້າຈົນກວ່າເຮົາກັບຄືນສູ່ຊີໂອນ. (ເຫດຜົນທີ່ເຮົາຕ້ອງກັບຄືນຊີໂອນເພື່ອປະຕິບັດພາລະກິດນັ້ນຄືວ່າ

ພາລະກິດໃນອະນາຄົດບໍ່ສາມາດຖືກເຮັດໃຫ້ສຳເລັດໄດ້ໃນເນື້ອໜັງ ແລະ ຖ້າພາລະກິດນີ້ສຳເລັດລົງໃນເນື້ອໜັງ, ມັນຈະເຮັດໃຫ້ຊື່ຂອງເຮົາເສຍກຽດ). ເມື່ອເຮົາເອົາຊະນະສັດຕູຂອງເຮົາ ແລະ ກັບຄືນສູ່ຊີໂອນ, ຊີວິດຈະງົດງາມ ແລະ ສະຫງົບສຸກຫຼາຍຂຶ້ນກວ່າຊີວິດກ່ອນຍຸກຕ່າງໆ. (ນີ້ກໍຍ້ອນວ່າເຮົາໄດ້ເອົາຊະນະໂລກຢ່າງສິ້ນເຊີງ ແລະ ຂອບໃຈການເກີດເປັນມະນຸດຄັ້ງທຳອິດ ແລະ ຄັ້ງທີສອງຂອງເຮົາ, ເຮົາໄດ້ຮັບສະຫງ່າລາສີຢ່າງຄົບຖ້ວນ. ໃນການເກີດເປັນມະນຸດຄັ້ງທຳອິດ, ເຮົາໄດ້ຮັບສະຫງ່າລາສີຂອງເຮົາພຽງແຕ່ບາງສ່ວນເທົ່ານັ້ນ, ແຕ່ໃນການເກີດເປັນມະນຸດຄັ້ງທີສອງຂອງເຮົາ, ຕົວຕົນຂອງເຮົາໄດ້ຮັບສະຫງ່າລາສີຢ່າງຄົບຖ້ວນ, ດັ່ງນັ້ນຈຶ່ງບໍ່ມີໂອກາດໃຫ້ຊາຕານເອົາປຽບໄດ້ອີກຕໍ່ໄປ. ເພາະສະນັ້ນ, ຊີວິດໃນອະນາຄົດໃນຊີໂອນຈະເປັນຊີວິດທີ່ງົດງາມ ແລະ ສະຫງົບສຸກຫຼາຍຍິ່ງຂຶ້ນ). ຕົວຕົນຂອງເຮົາຈະປາກົດຕົວຢ່າງມີສະຫງ່າລາສີຍິ່ງຂຶ້ນຕໍ່ໜ້າໂລກ ແລະ ຊາຕານເພື່ອເຮັດໃຫ້ມັງກອນແດງຜູ້ຍິ່ງໃຫຍ່ອັບອາຍ; ນີ້ແມ່ນຈຸດໃຈກາງແຫ່ງສະຕິປັນຍາທັງໝົດຂອງເຮົາ. ຍິ່ງເຮົາເວົ້າເຖິງສິ່ງພາຍນອກຫຼາຍເທົ່າໃດ, ພວກເຈົ້າກໍຍິ່ງສາມາດເຂົ້າໃຈໄດ້ຫຼາຍສໍ່ານັ້ນ; ຍິ່ງເຮົາເວົ້າເຖິງສິ່ງຕ່າງໆກ່ຽວກັບຊີໂອນທີ່ມະນຸດບໍ່ສາມາດເຫັນໄດ້ຫຼາຍເທົ່າໃດ, ພວກເຈົ້າຈະຍິ່ງຄິດວ່າສິ່ງເຫຼົ່ານີ້ວ່າງເປົ່າຫຼາຍສໍ່ານັ້ນ ແລະ ມັນຍິ່ງຈະຍາກທີ່ຈະໃຫ້ພວກເຈົ້າຈິນຕະນາການເຖິງຫຼາຍສໍ່ານັ້ນ; ພວກເຈົ້າຈະຄິດວ່າເຮົາກຳລັງເລົ່ານິທານຢູ່. ແນວໃດກໍຕາມ, ພວກເຈົ້າຕ້ອງເຝົ້າລະວັງ. ບໍ່ມີພຣະທຳທີ່ວ່າງເປົ່າຢູ່ໃນປາກຂອງເຮົາ; ພຣະທຳທີ່ອອກຈາກປາກຂອງເຮົານັ້ນເຊື່ອຖືໄດ້. ນີ້ເປັນຄວາມຈິງຢ່າງແນ່ນອນ, ເຖິງແມ່ນວ່າມັນຍາກທີ່ຈະເຂົ້າໃຈດ້ວຍວິທີຄິດຂອງພວກເຈົ້າ. (ຍ້ອນຂໍ້ຈຳກັດຂອງເນື້ອໜັງ, ມະນຸດບໍ່ສາມາດເຂົ້າໃຈສິ່ງທີ່ເຮົາເວົ້າໄດ້ຢ່າງຄົບຖ້ວນ ແລະ ທົ່ວເຖິງ ແລະ ຫຼາຍໆສິ່ງທີ່ເຮົາໄດ້ກ່າວ, ເຮົາບໍ່ໄດ້ເປີດເຜີຍຢ່າງຄົບຖ້ວນ. ແຕ່ເມື່ອພວກເຮົາກັບຄືນສູ່ຊີໂອນ, ເຮົາບໍ່ຈຳເປັນຕ້ອງອະທິບາຍ; ພວກເຈົ້າຈະເຂົ້າໃຈໂດຍທຳມະຊາດ). ຕ້ອງບໍ່ຖືເບົາໃນເລື່ອງນີ້.

ເຖິງແມ່ນວ່າເນື້ອໜັງ ແລະ ແນວຄິດຂອງມະນຸດມີຂີດຈຳກັດ, ເຮົາກໍຍັງຢາກປັບປຸງຄວາມຄິດຝ່າຍເນື້ອໜັງຂອງພວກເຈົ້າ ແລະ ຕໍ່ສູ້ແນວຄິດຂອງພວກເຈົ້າຜ່ານຄວາມລຶກລັບທີ່ໄດ້ຖືກເປີດເຜີຍ, ຍ້ອນດັ່ງທີ່ເຮົາໄດ້ເວົ້າມາຫຼາຍເທື່ອແລ້ວ ນີ້ແມ່ນບາດກ້າວພາລະກິດຂອງເຮົາ (ແລະ ພາລະກິດນີ້ຈະບໍ່ຢຸດຈົນກວ່າຈະເຂົ້າສູ່ຊີໂອນ). ມີ “ພູຊີໂອນ” ຢູ່ໃນຄວາມຄິດຂອງທຸກຄົນ ແລະ ມັນແຕກຕ່າງກັນສຳລັບທຸກຄົນ. ຍ້ອນເຮົາສືບຕໍ່ກ່າວເຖິງພູຊີໂອນ, ເຮົາຈະໃຫ້ຂໍ້ມູນທົ່ວໄປບາງຢ່າງກ່ຽວກັບມັນແກ່ພວກເຈົ້າ ເພື່ອວ່າພວກເຈົ້າອາດຈະຮູ້ຈັກມັນເລັກນ້ອຍ. ການຢູ່ເທິງພູຊີໂອນແມ່ນການກັບໄປສູ່ໂລກຝ່າຍວິນຍານ. ເຖິງແມ່ນວ່າມັນໝາຍເຖິງໂລກຝ່າຍວິນຍານ, ມັນບໍ່ແມ່ນສະຖານທີ່ທີ່ມະນຸດສາມາດເຫັນ ຫຼື ສຳຜັດໄດ້; ສິ່ງນີ້ໃຊ້ໄດ້ກັບຮ່າງກາຍ. ມັນບໍ່ສາມາດເຫັນໄດ້ ຫຼື ຈັບຕ້ອງໄດ້ຢ່າງແນ່ນອນ, ຍ້ອນວ່າເມື່ອຮ່າງກາຍປາກົດຕົວ, ມັນມີລັກສະນະ ແລະ ຮູບຮ່າງ, ແຕ່ເມື່ອຮ່າງກາຍບໍ່ປາກົດຕົວ, ມັນກໍບໍ່ມີລັກສະນະ ຫຼື ຮູບຮ່າງ. ຢູ່ເທິງພູຊີໂອນ, ຈະບໍ່ມີຄວາມກັງວົນກ່ຽວກັບອາຫານ, ເຄື່ອງນຸ່ງ, ຄວາມຕ້ອງການປະຈຳວັນ ຫຼື ບ່ອນພັກອາໄສ ຫຼື ຈະບໍ່ມີການແຕ່ງດອງ ຫຼື ຄອບຄົວ ແລະ ຈະບໍ່ມີການແບ່ງເພດ (ບັນດາຜູ້ທີ່ຢູ່ເທິງພູຊີໂອນທັງໝົດແມ່ນຕົວຕົນຂອງເຮົາ, ໃນຮ່າງກາຍດຽວ, ດັ່ງນັ້ນຈຶ່ງບໍ່ມີການ

ແຕ່ງດອງ, ຄອບຄົວ ຫຼື ການແບ່ງເພດ) ແລະ ທຸກສິ່ງທີ່ຕົວຕົນຂອງເຮົາກ່າວຈະບັນລຸຜົນ. ເມື່ອຄົນບໍ່ລະວັງ, ຕົວຕົນຂອງເຮົາຈະປາກົດຕົວທ່າມກາງພວກເຂົາ ແລະ ເມື່ອຄົນບໍ່ໃສ່ໃຈ, ຕົວຕົນຂອງເຮົາຈະຫາຍໄປ. (ນີ້ແມ່ນສິ່ງທີ່ຄົນມີເລືອດເນື້ອບໍ່ສາມາດເຮັດສຳເລັດໄດ້, ດັ່ງນັ້ນ ມັນຈຶ່ງເປັນການຍາກສຳລັບພວກເຈົ້າທີ່ຈະຈິນຕະນາການໄດ້ໃນຕອນນີ້). ໃນອະນາຄົດ, ຍັງຈະມີດວງຕາເວັນ, ດວງເດືອນ ແລະ ສະຫວັນ ແລະ ແຜ່ນດິນໂລກທີ່ແທ້ຈິງຢູ່, ແຕ່ຍ້ອນວ່າຕົວຕົນຂອງເຮົາຈະຢູ່ໃນຊີໂອນ, ດວງອາທິດຈະບໍ່ແຜດເຜົາ, ບໍ່ມີກາງເວັນ ແລະ ບໍ່ມີການທົນທຸກຈາກໄພພິບັດທາງທຳມະຊາດ. ເມື່ອເຮົາເວົ້າວ່າພວກເຮົາຈະບໍ່ຕ້ອງການແສງຕະກຽງ ຫຼື ແສງແດດ ຍ້ອນວ່າພຣະເຈົ້າຈະປະທານແສງສະຫວ່າງໃຫ້ພວກເຮົາ, ເຮົາກຳລັງເວົ້າກ່ຽວກັບການຢູ່ໃນຊີໂອນ. ອີງຕາມຄວາມຄິດຂອງມະນຸດ, ທຸກສິ່ງຢູ່ໃນຈັກກະວານຈະຕ້ອງຖືກກຳຈັດ ແລະ ທຸກຄົນຕ້ອງອາໄສຢູ່ໃນຄວາມສະຫວ່າງຂອງເຮົາ. ພວກເຂົາຄິດວ່ານີ້ແມ່ນຄວາມໝາຍທີ່ແທ້ຈິງຂອງ "ພວກເຮົາຈະບໍ່ຕ້ອງການແສງຕະກຽງ ຫຼື ແສງແດດ ຍ້ອນວ່າພຣະເຈົ້າຈະປະທານແສງສະຫວ່າງໃຫ້ພວກເຮົາ", ແຕ່ຄວາມຈິງແລ້ວ, ນີ້ແມ່ນການຕີຄວາມໝາຍຜິດ. ເມື່ອເຮົາເວົ້າວ່າ "ທຸກໆເດືອນ, ຕົ້ນໄມ້ຈະອອກໝາກສິບສອງແບບ", ເຮົາໝາຍເຖິງເລື່ອງໃນຊີໂອນ. ປະໂຫຍກນີ້ສະແດງໃຫ້ເຫັນເຖິງເງື່ອນໄຂຂອງຊີວິດໃນຊີໂອນຢ່າງຄົບຖ້ວນ. ໃນຊີໂອນ, ເວລາຈະບໍ່ຖືກຈຳກັດ ແລະ ຈະບໍ່ມີຂີດຈຳກັດດ້ານພູມີສາດ ແລະ ອາວະກາດ. ນັ້ນຄືເຫດຜົນທີ່ເຮົາເວົ້າວ່າ "ທຸກເດືອນ". "ໝາກໄມ້ສິບສອງແບບ" ບໍ່ໄດ້ສະແດງເຖິງພຶດຕິກຳທີ່ພວກເຈົ້າດຳລົງຊີວິດຢູ່ໃນປັດຈຸບັນນີ້; ກົງກັນຂ້າມ, ມັນໝາຍເຖິງຊີວິດແຫ່ງເສລີພາບໃນຊີໂອນ. ພຣະທຳເຫຼົ່ານີ້ແມ່ນການເວົ້າລວມໆເຖິງຊີວິດໃນຊີໂອນ. ຈາກເລື່ອງນີ້, ຄົນໆໜຶ່ງສາມາດເຫັນໄດ້ວ່າ ຊີວິດໃນຊີໂອນຈະອຸດົມສົມບູນ ແລະ ຫຼາກຫຼາຍ (ຍ້ອນວ່າຢູ່ທີ່ນີ້, "ສິບສອງ" ໝາຍເຖິງຄວາມສົມບູນ). ມັນຈະເປັນຊີວິດທີ່ປາສະຈາກຄວາມໂສກເສົ້າ ແລະ ນໍ້າຕາ, ຈະບໍ່ມີການຂູດຮີດ ຫຼື ການກົດຂີ່ຂົ່ມເຫັງ, ດັ່ງນັ້ນ ທຸກຄົນຈະໄດ້ຮັບການປົດປ່ອຍ ແລະ ເປັນອິດສະຫຼະ. ນີ້ກໍຍ້ອນວ່າ ທຸກສິ່ງດຳລົງຢູ່ໃນຕົວຕົນຂອງເຮົາ, ບໍ່ມີໃຜສາມາດແຍກອອກໄດ້ ແລະ ທຸກສິ່ງຈະເປັນສາກຂອງຄວາມງົດງາມ ແລະ ຄວາມໃໝ່ທີ່ນິລັນດອນ. ມັນຈະແມ່ນເວລາທີ່ທຸກສິ່ງທຸກຢ່າງກຽມພ້ອມ ແລະ ເປັນການເລີ່ມຕົ້ນຊີວິດໃໝ່ຂອງພວກເຮົາຫຼັງຈາກພວກເຮົາກັບຄືນສູ່ຊີໂອນ.

ເຖິງແມ່ນວ່າພາລະກິດຂອງເຮົາເທິງແຜ່ນດິນໂລກໄດ້ສຳເລັດລົງຢ່າງຄົບຖ້ວນ, ເຮົາກໍຍັງຕ້ອງການໃຫ້ລູກຊາຍກົກຂອງເຮົາປະຕິບັດພາລະກິດເທິງແຜ່ນດິນໂລກ, ດັ່ງນັ້ນ ເຮົາຈຶ່ງບໍ່ສາມາດກັບຄືນສູ່ຊີໂອນເທື່ອ. ເຮົາບໍ່ສາມາດກັບຄືນສູ່ຊີໂອນຜູ້ດຽວ. ເຮົາຈະກັບຄືນເມືອສູ່ຊີໂອນພ້ອມກັນກັບລູກຊາຍກົກຂອງເຮົາຫຼັງຈາກທີ່ພວກເຂົາສຳເລັດພາລະກິດຂອງພວກເຂົາຢູ່ເທິງແຜ່ນດິນໂລກ. ສະນັ້ນ, ອາດເວົ້າໄດ້ຢ່າງຖືກຕ້ອງວ່າ ພວກເຮົາກຳລັງໄດ້ຮັບສະຫງ່າລາສີຮ່ວມກັນ; ນີ້ແມ່ນການສະແດງອອກທີ່ສົມບູນແບບຂອງຕົວຕົນຂອງເຮົາ. (ເຮົາເວົ້າວ່າພາລະກິດຂອງລູກຊາຍກົກຂອງເຮົາເທິງແຜ່ນດິນໂລກຍັງບໍ່ທັນສຳເລັດເທື່ອ ຍ້ອນວ່າລູກຊາຍກົກຂອງເຮົາຍັງບໍ່ທັນໄດ້ປາກົດຕົວເທື່ອ. ພາລະກິດນີ້ຍັງຈະຕ້ອງຖືກປະຕິບັດໂດຍຜູ້ໃຫ້ບໍລິການທີ່ຊື່ສັດ ແລະ ຈິງໃຈ).

# ບົດທີ 116

ໃນບັນດາພຣະທຳຂອງເຮົາ, ພຣະທຳຫຼາຍຂໍ້ເຮັດໃຫ້ຜູ້ຄົນຮູ້ສຶກຢ້ານ, ພຣະທຳຫຼາຍຂໍ້ເຮັດໃຫ້ຜູ້ຄົນສັ່ນດ້ວຍຄວາມຢ້ານຫຼາຍ; ພຣະທຳອີກຫຼາຍຂໍ້ກໍຍັງເຮັດໃຫ້ຜູ້ຄົນທົນທຸກ ແລະ ສິ້ນຫວັງ ແລະ ພຣະທຳຂໍ້ອື່ນໆອີກຫຼາຍຂໍ້ກໍຍິ່ງກໍ່ໃຫ້ເກີດຄວາມພິນາດແກ່ຜູ້ຄົນ. ບໍ່ມີໃຜສາມາດຢັ່ງເຖິງ ຫຼື ເຂົ້າໃຈຄວາມອຸດົມສົມບູນໃນພຣະທຳຂອງເຮົາໄດ້ຢ່າງຊັດເຈນ. ມີແຕ່ເມື່ອເຮົາບອກພວກເຈົ້າກ່ຽວກັບພຣະທຳຂອງເຮົາ ແລະ ເປີດເຜີຍພຣະທຳເຫຼົ່ານັ້ນໃຫ້ກັບພວກເຈົ້າແຕ່ລະປະໂຫຍກເທົ່ານັ້ນ ພວກເຈົ້າຈຶ່ງຮຽນຮູ້ສະຖານະການທົ່ວໄປຂອງເລື່ອງລາວຕ່າງໆ; ໃນຂະນະທີ່ຍັງຄົງບໍ່ຊັດເຈນກ່ຽວກັບໂສມໜ້າທີ່ແທ້ຈິງຂອງຄວາມເປັນຈິງສະເພາະເຈາະຈົງ. ສະນັ້ນ, ເຮົາຈະໃຊ້ຄວາມຈິງເພື່ອເປີດເຜີຍພຣະທຳທັງໝົດຂອງເຮົາ, ດ້ວຍເຫດນັ້ນກໍເຮັດໃຫ້ພວກເຈົ້າເຂົ້າໃຈຫຼາຍຍິ່ງຂຶ້ນ. ເມື່ອຄຳນຶງເຖິງຮູບແບບແຫ່ງຖ້ອຍຄຳຂອງເຮົາ, ເຮົາບໍ່ພຽງແຕ່ເວົ້າດ້ວຍພຣະທຳຂອງເຮົາເທົ່ານັ້ນ, ແຕ່ເຮົາປະຕິບັດຫຼາຍຍິ່ງຂຶ້ນດ້ວຍພຣະທຳຂອງເຮົາ; ນີ້ແມ່ນຄວາມໝາຍແທ້ຈິງຂອງພຣະທຳ ແລະ ຄວາມສຳເລັດທີ່ເກີດຂຶ້ນໃນເວລາດຽວກັນ. ຍ້ອນເຮົາ ທຸກສິ່ງຈຶ່ງເປັນອິດສະຫຼະ ແລະ ທຸກສິ່ງຈຶ່ງຖືກປົດປ່ອຍ ແລະ ບິນພົ້ນຖານນີ້, ທຸກສິ່ງທີ່ເຮົາເຮັດກໍເຕັມໄປດ້ວຍສະຕິປັນຍາ. ເຮົາບໍ່ເວົ້າໂດຍບໍ່ຮອບຄອບ ແລະ ເຮົາຍັງບໍ່ປະຕິບັດໂດຍບໍ່ຮອບຄອບ. (ບໍ່ວ່າຈະຢູ່ໃນຄວາມເປັນມະນຸດ ຫຼື ຄວາມເປັນພຣະເຈົ້າ, ເຮົາເວົ້າ ແລະ ປະຕິບັດດ້ວຍສະຕິປັນຍາ, ເພາະຄວາມເປັນມະນຸດຂອງເຮົາບໍ່ສາມາດຕັດຂາດຈາກຕົວຕົນຂອງເຮົາເອງ.) ແຕ່ເມື່ອເຮົາເວົ້າ, ບໍ່ມີໃຜໃສ່ໃຈນໍ້າສຽງແຫ່ງຖ້ອຍຄຳຂອງເຮົາ; ເມື່ອເຮົາປະຕິບັດ, ບໍ່ມີໃຜສົນໃຈວິທີການແຫ່ງພາລະກິດຂອງເຮົາ. ນີ້ຄືຂໍ້ບົກຜ່ອງຂອງມະນຸດ. ເຮົາຈະເປີດເຜີຍກຳລັງຂອງເຮົາຕໍ່ມະນຸດທຸກຄົນ, ບໍ່ແມ່ນຕໍ່ລູກຊາຍກົກຂອງເຮົາເທົ່ານັ້ນ, ແຕ່ເຮົາຍິ່ງຈະເປີດເຜີຍກຳລັງຂອງເຮົາພາຍໃນບັນດາປະຊາຊາດ ແລະ ທ່າມກາງທຸກຄົນ; ການເຮັດແບບນີ້ເທົ່ານັ້ນຈຶ່ງຈະເປັນຄຳພະຍານທີ່ມີອຳນາດໃນການເຮັດໃຫ້ຊາຕານອັບອາຍ. ເຮົາບໍ່ໄດ້ປະຕິບັດຢ່າງໂງ່ໆ; ຄົນສ່ວນຫຼາຍຄິດວ່າ ການເປັນພະຍານຂອງເຮົາໃຫ້ກັບລູກຊາຍກົກແມ່ນຄວາມຜິດພາດ, ພວກເຂົາເວົ້າວ່າ ມີພຣະເຈົ້າອົງອື່ນອີກ ນອກຈາກເຮົາ, ເຮົາປະຕິບັດໂດຍໄຮ້ສະຕິ, ເຮົາເຮັດໃຫ້ຕົນເອງເສຍກຽດ; ຈາກຈຸດນັ້ນ, ຄວາມເສື່ອມຊາມຂອງມະນຸດຍິ່ງຖືກເປີດໂປງຫຼາຍຂຶ້ນ. ເປັນໄປໄດ້ບໍວ່າ ການເປັນພະຍານໃຫ້ກັບລູກຊາຍກົກຄືຄວາມຜິດພາດຂອງເຮົາ? ພວກເຈົ້າເວົ້າວ່າເຮົາຜິດ, ພວກເຈົ້າສາມາດພິສູດໄດ້ບໍ? ຖ້າບໍ່ແມ່ນຍ້ອນຄະຕິທຳຂອງເຮົາ, ຄຳພະຍານຂອງເຮົາ, ພວກເຈົ້າຈະຍັງກົດພຣະບຸດຂອງເຮົາໃຫ້ຢູ່ພາຍໃຕ້ພວກເຈົ້າ, ຍັງປະຕິບັດຕໍ່ພຣະອົງດ້ວຍຄວາມບໍ່ສົນໃຈທີ່ເຢັນຊາ, ຍັງປະຕິບັດຕໍ່ພຣະອົງດັ່ງຄົນຮັບໃຊ້ຂອງພວກເຈົ້າ. ຝູງສັດຮ້າຍນີ້ເອີຍ! ເຮົາຈະຈັດແຍກເຈົ້າອອກເທື່ອລະຄົນ! ບໍ່ມີໃຜທີ່ຈະຖືກປ່ອຍໄປ! ຈົ່ງບອກເຮົາແມະ, ສິ່ງຂອງປະເພດໃດທີ່ບໍ່ເຂົ້າກັນກັບຄົນທີ່ມີຄວາມເປັນມະນຸດທຳມະດາ? ພວກເຂົາເປັນສັດຮ້າຍຢ່າງແນ່ນອນ! ເຮົາທົນພວກເຂົາບໍ່ໄດ້ແທ້ໆ. ຖ້າເຮົາລໍຖ້າຄຳພະຍານຂອງພວກເຈົ້າ, ພາລະກິດຂອງເຮົາກໍຈະຖືກຊັກຊ້າແລ້ວ! ຝູງສັດຮ້າຍນີ້ເອີຍ! ເຈົ້າບໍ່ມີຄວາມເປັນມະນຸດເລີຍ! ເຮົາບໍ່ຕ້ອງການເຈົ້າໃຫ້ການບໍລິການແກ່ເຮົາ!

ຈົ່ງອອກໄປຈາກບ່ອນນີ້ດຽວນີ້! ເຈົ້າໄດ້ຂົ່ມເຫັງ ແລະ ກົດຂີ່ພຣະບຸດຂອງເຮົາເປັນເວລາດົນເຕີບແລ້ວ; ເຮົາຈະຢຽບຢ່ຳເຈົ້າຈົນແຫຼກລະອຽດ! ຈົ່ງເບິ່ງວ່າຈະເກີດຫຍັງຂຶ້ນຖ້າເຈົ້າກ້າທີ່ຈະບ້າອີກຄັ້ງ, ຈົ່ງເບິ່ງວ່າຈະເກີດຫຍັງຂຶ້ນຖ້າເຈົ້າກ້າທີ່ຈະເຮັດໃຫ້ເຮົາອັບອາຍອີກຄັ້ງ! ເຮົາໄດ້ເຮັດໃຫ້ພາລະກິດທີ່ຍິ່ງໃຫຍ່ຂອງເຮົາສຳເລັດແລ້ວ ແລະ ເຮົາຄວນຫັນກັບມາ ແລະ ກຳຈັດຝູງສັດຮ້າຍນີ້ເສຍ!

ທຸກສິ່ງຖືກເຮັດໃຫ້ສຳເລັດໃນມືຂອງເຮົາ (ຍ້ອນເຮົາຮັກຄົນເຫຼົ່ານັ້ນ) ແລະ ທຸກສິ່ງຍັງຖືກທຳລາຍໃນມືຂອງເຮົາ (ຍ້ອນເຮົາຊັງພວກສັດຮ້າຍເຫຼົ່ານັ້ນ, ເຮົາກຽດຊັງຄົນ, ເລື່ອງ ແລະ ສິ່ງເຫຼົ່ານັ້ນ). ເຮົາເຮັດໃຫ້ລູກຊາຍກົກຂອງເຮົາເຫັນທຸກສິ່ງທີ່ເຮົາຕ້ອງການເຮັດ, ໃຫ້ພວກເຂົາເຂົ້າໃຈຢ່າງທົ່ວເຖິງ, ຈາກຈຸດນັ້ນ ພວກເຂົາຈະໄດ້ເຫັນທຸກສິ່ງທີ່ເຮົາໄດ້ເຮັດຕັ້ງແຕ່ທີ່ອອກມາຈາກຊີໂອນ. ຫຼັງຈາກນັ້ນ, ພວກເຮົາກໍຈະເຂົ້າສູ່ພູເຂົາຊີໂອນຮ່ວມກັນ, ເຂົ້າສູ່ບ່ອນທີ່ພວກເຮົາຢູ່ກ່ອນຍຸກຕ່າງໆ ແລະ ດຳລົງຊີວິດຂອງພວກເຮົາໃໝ່. ຈາກນັ້ນເປັນຕົ້ນໄປ, ຈະບໍ່ມີການພົວພັນກັບໂລກ ແລະ ຝູງສັດຮ້າຍນີ້ອີກຕໍ່ໄປ, ແຕ່ກົງກັນຂ້າມຈະມີພຽງເສລີພາບຢ່າງສົມບູນ, ທຸກສິ່ງຈະບໍ່ມີຂໍ້ຈຳກັດ ແລະ ປາສະຈາກອຸປະສັກ. ແມ່ນໃຜກ້າຕໍ່ຕ້ານຄົນໃດຄົນໜຶ່ງທີ່ຢູ່ທ່າມກາງລູກຊາຍກົກຂອງເຮົາ? ແມ່ນໃຜກ້າຕໍ່ຕ້ານລູກຊາຍກົກຂອງເຮົາ? ເຮົາຈະບໍ່ປ່ອຍເຂົາໄປງ່າຍໆ! ບໍ່ວ່າເຈົ້າໄດ້ນັບຖືເຮົາແນວໃດກໍຕາມໃນອະດີດ ເຈົ້າກໍຕ້ອງນັບຖືລູກຊາຍກົກຂອງເຮົາແບບດຽວກັນໃນປັດຈຸບັນ. ຢ່າເຮັດຢ່າງໜຶ່ງເມື່ອຢູ່ຕໍ່ໜ້າເຮົາ ແລະ ເຮັດອີກຢ່າງເມື່ອຢູ່ລັບຫຼັງເຮົາ; ເຮົາເຫັນວ່າທຸກຄົນເປັນແນວໃດ ດ້ວຍຄວາມຊັດເຈນແຈ່ມແຈ້ງ. ການທີ່ບໍ່ຊື່ສັດກັບພຣະບຸດຂອງເຮົາກໍຄືການບໍ່ເຄົາລົບເຮົາ ເຊິ່ງເປັນຄວາມຈິງທີ່ເຫັນໄດ້ງ່າຍ ຍ້ອນພວກເຮົາແມ່ນຮ່າງກາຍໜຶ່ງດຽວ. ຖ້າບາງຄົນດີຕໍ່ເຮົາ ແຕ່ມີທ່າທີອີກແບບຕໍ່ລູກຊາຍກົກຂອງເຮົາ, ແລ້ວພວກເຂົາກໍເປັນເຊື້ອສາຍຕົວຢ່າງຂອງມັງກອນແດງໃຫຍ່ຢ່າງແນ່ນອນ, ເພາະພວກເຂົາທຳລາຍຮ່າງກາຍຂອງພຣະຄຣິດ; ຄວາມບາບນີ້ບໍ່ສາມາດໃຫ້ອະໄພໄດ້! ພວກເຈົ້າແຕ່ລະຄົນຕ້ອງເຫັນສິ່ງນີ້. ມັນແມ່ນໜ້າທີ່ຂອງພວກເຈົ້າທີ່ຈະເປັນພະຍານໃຫ້ກັບເຮົາ ແລະ ຍິ່ງໄປກວ່ານັ້ນ ມັນຄືພັນທະຂອງພວກເຈົ້າທີ່ຈະເປັນພະຍານໃຫ້ກັບລູກຊາຍກົກ. ບໍ່ມີໃຜໃນບັນດາພວກເຈົ້າທີ່ສາມາດໜີຄວາມຮັບຜິດຊອບຂອງພວກເຈົ້າ; ໃຜກໍຕາມທີ່ລົບກວນ, ເຮົາຈະຈັດການເຈົ້າທັນທີ! ຢ່າຄິດວ່າເຈົ້າດີເລີດເກີນໄປຫຼາຍ. ເຮົາກຳລັງບອກເຈົ້າ! ຍິ່ງໃຜກໍຕາມເປັນແບບນີ້ຫຼາຍສໍ່າໃດ, ພວກເຂົາກໍຍິ່ງເປັນເປົ້າໝາຍແຫ່ງການລົງໂທດທີ່ເຂັ້ມງວດຂອງເຮົາຫຼາຍສໍ່ານັ້ນ! ຍິ່ງໃຜກໍຕາມເປັນແບບນີ້ຫຼາຍສໍ່າໃດ ກໍຍິ່ງໝົດຫວັງຫຼາຍສໍ່ານັ້ນ ແລະ ກໍຍິ່ງເປັນລູກຊາຍແຫ່ງການຕົກນະຮົກຫຼາຍສໍ່ານັ້ນ. ເຮົາຈະຕີສອນເຈົ້າຕະຫຼອດໄປ!

ພາລະກິດທັງໝົດຂອງເຮົາແມ່ນໄດ້ຮັບການປະຕິບັດເປັນການສ່ວນຕົວໂດຍພຣະວິນຍານຂອງເຮົາ ແລະ ເຮົາບໍ່ຍອມໃຫ້ຈຳພວກຂອງຊາຕານມາແຊກແຊງໄດ້. ນີ້ກໍແມ່ນເພື່ອຫຼີກຫຼ່ຽງການລົບກວນແຜນການຂອງເຮົາ. ໃນທີ່ສຸດແລ້ວ ເຮົາຈະຍອມໃຫ້ທັງຜູ້ໃຫຍ່ ແລະ ເດັກນ້ອຍລຸກຂຶ້ນ ແລະ ສັນລະເສີນເຮົາ ແລະ ລູກຊາຍກົກຂອງເຮົາ, ສັນລະເສີນການກະທຳທີ່ມະຫັດສະຈັນຂອງເຮົາ ແລະ ສັນລະເສີນການສຳແດງຕົວຂອງພຣະບຸກຄົນຂອງເຮົາ. ເຮົາຈະໃຫ້ສຽງແຫ່ງການສັນລະເສີນດັງກ້ອງກັງວານໄປທົ່ວຈັກກະວານ ແລະ ຈົນສຸດປາຍແຜ່ນດິນໂລກ, ສະເທືອນພູເຂົາ, ແມ່ນ້ຳ ແລະ ສິ່ງທັງປວງ

ແລະ ເຮົາຈະເຮັດໃຫ້ຊາຕານອັບອາຍຢ່າງທີ່ສຸດ; ເຮົາຈະໃຊ້ຄຳພະຍານຂອງເຮົາເພື່ອທຳລາຍໂລກເດີມທັງໝົດທີ່ສົກກະປົກ ແລະ ຊົ່ວຮ້າຍ ແລະ ສ້າງໂລກໃໝ່ທີ່ບໍລິສຸດ ແລະ ບໍ່ມີມົນທິນ. (ເມື່ອເວົ້າວ່າດວງຕາເວັນ, ດວງເດືອນ ແລະ ດວງດາວ ແລະ ວັດຖຸທ້ອງຟ້າຈະບໍ່ປ່ຽນແປງໃນອະນາຄົດ, ເຮົາບໍ່ໄດ້ໝາຍຄວາມວ່າ ໂລກເກົ່າຈະຍັງມີຢູ່ ແຕ່ກົງກັນຂ້າມ ໂລກທັງໝົດຈະຖືກທຳລາຍ ແລະ ໂລກເກົ່າຈະຖືກແທນໃໝ່. ເຮົາບໍ່ໄດ້ໝາຍຄວາມວ່າຈະແທນທີ່ຈັກກະວານ.) ມີແຕ່ເມື່ອນັ້ນ ມັນຈຶ່ງຈະເປັນໂລກທີ່ສອດຄ່ອງກັບຄວາມປະສົງຂອງເຮົາ; ໃນໂລກນັ້ນຈະບໍ່ມີການປາບປາມດັ່ງໃນປັດຈຸບັນ, ແລະ ຈະບໍ່ມີປະກົດການແຫ່ງການທີ່ຄົນຂູດຮີດເຊິ່ງກັນແລະກັນໃນປັດຈຸບັນ. ກົງກັນຂ້າມ, ຈະມີຄວາມຍຸຕິທຳ ແລະ ຄວາມສົມເຫດສົມຜົນທີ່ຢູ່ພາຍໃນເນື້ອໜັງແທ້ໆ. (ເຖິງແມ່ນເຮົາເວົ້າວ່າ ຈະມີຄວາມຍຸຕິທຳ ແລະ ຄວາມສົມເຫດສົມຜົນ, ມັນກໍຈະຢູ່ພາຍໃນເນື້ອໜັງ; ເມື່ອປຽບທຽບກັບອານາຈັກຂອງເຮົາ, ມັນກໍຈະແຕກຕ່າງກັນຫຼາຍ, ແຕກຕ່າງຄືກັບສະຫວັນ ແລະ ແຜ່ນດິນໂລກ; ບໍ່ມີທາງປຽບທຽບກັນໄດ້ແທ້ໆ, ໃນທີ່ສຸດແລ້ວ ໂລກມະນຸດກໍຄືໂລກຂອງມະນຸດ, ໂລກວິນຍານກໍຄືໂລກຝ່າຍວິນຍານ.) ໃນເວລານັ້ນ, ລູກຊາຍກົກຂອງເຮົາ ແລະ ເຮົາຈະໃຊ້ອຳນາດຕັດສິນເໜືອໂລກດັ່ງກ່າວ (ໃນໂລກນີ້ ຈະບໍ່ມີການລົບກວນຈາກຊາຕານ, ເພາະຊາຕານຖືກເຮົາກຳຈັດອອກໄປຢ່າງສົມບູນແລ້ວ), ແຕ່ຊີວິດຂອງພວກເຮົາກໍຍັງຈະເປັນຊີວິດແຫ່ງອານາຈັກ ເຊິ່ງບໍ່ມີໃຜສາມາດປະຕິເສດສິ່ງນີ້ໄດ້. ຕະຫຼອດທັງຍຸກຕ່າງໆ, ບໍ່ເຄີຍມີມະນຸດຄົນໃດ (ບໍ່ວ່າເຂົາຈະຊື່ສັດສໍ່າໃດກໍຕາມ) ໄດ້ປະສົບກັບຊີວິດປະເພດນີ້ຈັກເທື່ອ, ເພາະຕະຫຼອດທັງຍຸກຕ່າງໆ ບໍ່ເຄີຍມີໃຜເຮັດໜ້າທີ່ເປັນລູກຊາຍກົກຂອງເຮົາ ແລະ ພວກເຂົາຍັງຈະສະໜອງບໍລິການໃຫ້ກັບເຮົາໃນເວລາຕໍ່ມາ. ເຖິງແມ່ນຜູ້ບໍລິການເຫຼົ່ານີ້ຊື່ສັດ, ໃນທີ່ສຸດ ພວກເຂົາກໍເປັນເຊື້ອສາຍຂອງຊາຕານທີ່ຖືກເຮົາເອົາຊະນະ, ສະນັ້ນ ຫຼັງຈາກຄວາມຕາຍຝ່າຍເນື້ອໜັງ ພວກເຂົາກໍຍັງເກີດໃນໂລກມະນຸດເພື່ອໃຫ້ບໍລິການເຮົາ; ນີ້ຄືຄວາມໝາຍທີ່ແທ້ຈິງຂອງ “ໃນທີ່ສຸດແລ້ວ ລູກຊາຍກໍຄືລູກຊາຍ ແລະ ໃນທີ່ສຸດແລ້ວ ຜູ້ບໍລິການກໍຄືເຊື້ອສາຍຂອງຊາຕານ”. ຕະຫຼອດທັງຍຸກຕ່າງໆ, ບໍ່ຮູ້ວ່າມີເທົ່າໃດຄົນທີ່ບໍລິການລູກຊາຍກົກໃນປັດຈຸບັນ; ຈາກຈຳນວນຜູ້ບໍລິການທັງໝົດ, ບໍ່ມີໃຜສາມາດແລ່ນໜີໄດ້ ແລະ ເຮົາຈະເຮັດໃຫ້ພວກເຂົາບໍລິການເຮົາຕະຫຼອດໄປ. ເມື່ອພິຈາລະນາເຖິງທຳມະຊາດຂອງພວກເຂົາ, ທຸກຄົນເປັນລູກໆຂອງຊາຕານ, ທຸກຄົນຕໍ່ຕ້ານເຮົາ ແລະ ເຖິງແມ່ນພວກເຂົາບໍລິການເຮົາ, ທຸກຄົນກໍຖືກບັງຄັບ ແລະ ທຸກຄົນບໍ່ມີທາງເລືອກອື່ນ. ນີ້ກໍ່ຍ້ອນວ່າທຸກສິ່ງຖືກຄວບຄຸມໂດຍມືຂອງເຮົາ; ຜູ້ບໍລິການທີ່ເຮົາໃຊ້ຕ້ອງໃຫ້ບໍລິການເຮົາຈົນເຖິງເວລາສຸດທ້າຍ. ສະນັ້ນ, ຍັງມີຫຼາຍຄົນໃນປັດຈຸບັນທີ່ມີທຳມະຊາດດຽວກັບຜູ້ປະກາດພຣະທຳ ແລະ ອັກຄະສາວົກຕະຫຼອດຍຸກຕ່າງໆ, ເພາະພວກເຂົາມີວິນຍານດຽວກັນ. ສະນັ້ນ, ຍັງມີຜູ້ບໍລິການຫຼາຍຄົນທີ່ຊື່ຕໍ່ເຮົາ, ແຕ່ໃນທີ່ສຸດແລ້ວ (ຕະຫຼອດເວລາຫົກພັນປີທີ່ພວກເຂົາໃຫ້ການບໍລິການແກ່ເຮົາຢ່າງຕໍ່ເນື່ອງ, ແລ້ວຄົນເຫຼົ່ານີ້ກໍເປັນສ່ວນໜຶ່ງຂອງຜູ້ບໍລິການ), ບໍ່ມີໃຜສາມາດບັນລຸສິ່ງທີ່ທຸກຄົນໃນຍຸກຕ່າງໆໄດ້ຫວັງໄວ້, ເພາະວ່າສິ່ງທີ່ເຮົາໄດ້ຈັດກຽມໄວ້ ກໍບໍ່ແມ່ນເພື່ອພວກເຂົາ.

ທຸກສິ່ງທີ່ເປັນຂອງເຮົາແມ່ນໄດ້ຖືກເຮັດໃຫ້ສຳເລັດຕໍ່ໜ້າສາຍຕາທັງປວງແລ້ວ; ເຮົາໄດ້ເຮັດໃຫ້

ລູກຊາຍກົກຂອງເຮົາກັບຄືນສູ່ບ້ານຂອງເຮົາ, ກັບຄືນໄປຢູ່ຂ້າງເຮົາ ແລະ ຮ່ວມກັນໃໝ່. ເພາະເຮົາໄດ້ກັບຄືນຢ່າງມີໄຊຊະນະ ແລະ ມີໄຊຊະນະ ແລະ ເຮົາໄດ້ຮັບເອົາສະຫງ່າລາສີຢ່າງສົມບູນ, ເຮົາໄດ້ມາເພື່ອນໍາເອົາພວກເຈົ້າກັບຄືນ. ໃນອະດີດນັ້ນ, ບາງຄົນໄດ້ທໍານາຍເຖິງ "ຍິງສາວບໍລິສຸດທີ່ສະຫຼາດຫ້າຄົນ, ຍິງສາວບໍລິສຸດທີ່ໂງ່ຫ້າຄົນ"; ເຖິງແມ່ນການທໍານາຍບໍ່ຖືກຕ້ອງ, ມັນກໍບໍ່ຜິດໂດຍສິ້ນເຊີງ, ສະນັ້ນເຮົາຈຶ່ງສາມາດອະທິບາຍບາງຢ່າງໃຫ້ກັບພວກເຈົ້າ. "ຍິງສາວບໍລິສຸດທີ່ສະຫຼາດຫ້າຄົນ ແລະ ຍິງສາວບໍລິສຸດທີ່ໂງ່ຫ້າຄົນ" ບໍ່ສາມາດສະແດງເຖິງຈໍານວນຂອງຜູ້ຄົນ ຫຼື ຄົນປະເພດໜຶ່ງ "ຍິງສາວບໍລິສຸດທີ່ສະຫຼາດຫ້າຄົນ" ໝາຍເຖິງຈໍານວນຄົນ, ສ່ວນ "ຍິງສາວບໍລິສຸດທີ່ໂງ່ຫ້າຄົນ" ເປັນຕົວແທນໃຫ້ກັບຄົນປະເພດໜຶ່ງ, ແຕ່ທັງສອງກຸ່ມນີ້ບໍ່ໄດ້ໝາຍເຖິງລູກຊາຍກົກ. ກົງກັນຂ້າມ, ພວກເຂົາເປັນຕົວແທນໃຫ້ກັບສັບພະສິ່ງທັງປວງ. ນີ້ແມ່ນເຫດຜົນທີ່ວ່າ ເປັນຫຍັງຈຶ່ງຂໍໃຫ້ພວກເຂົາຈັດກຽມນໍ້າມັນໄວ້ໃນຍຸກສຸດທ້າຍ. (ສັບພະສິ່ງທັງປວງບໍ່ມີຄຸນນະພາບຂອງເຮົາ; ຖ້າພວກເຂົາຕ້ອງການເປັນຍິງສາວບໍລິສຸດທີ່ສະຫຼາດ ແລ້ວພວກເຂົາຈໍາເປັນຕ້ອງຈັດກຽມນໍ້າມັນ ແລະ ດ້ວຍເຫດນັ້ນ ພວກເຂົາຈໍາເປັນຕ້ອງມີພຣະທໍາຂອງເຮົາ.) "ຍິງສາວບໍລິສຸດທີ່ສະຫຼາດຫ້າຄົນ" ເປັນຕົວແທນໃຫ້ກັບລູກຊາຍຂອງເຮົາ ແລະຄົນຂອງເຮົາທ່າມກາງມະນຸດທີ່ເຮົາໄດ້ສ້າງ. ພວກເຂົາຖືກເອີ້ນວ່າ "ຍິງສາວບໍລິສຸດ" ກໍເພາະວ່າ ເຖິງແມ່ນພວກເຂົາເກີດເທິງແຜ່ນດິນໂລກ, ພວກເຂົາກໍຍັງຖືກຮັບເອົາໂດຍເຮົາ; ຄົນໜຶ່ງສາມາດເວົ້າໄດ້ວ່າພວກເຂົາບໍລິສຸດ, ສະນັ້ນພວກເຂົາຈຶ່ງຖືກເອີ້ນວ່າ "ຍິງສາວບໍລິສຸດ". "ຫ້າ" ດັ່ງທີ່ກ່າວມາກ່ອນແລ້ວເປັນຕົວແທນໃຫ້ກັບຈໍານວນຂອງລູກຊາຍຂອງເຮົາ ແລະ ຜູ້ຄົນຂອງເຮົາທີ່ເຮົາໄດ້ກໍານົດລ່ວງໜ້າໄວ້ແລ້ວ. "ຍິງສາວບໍລິສຸດທີ່ໂງ່ຫ້າຄົນ" ໝາຍເຖິງຜູ້ໃຫ້ບໍລິການ. ພວກເຂົາໃຫ້ບໍລິການແກ່ເຮົາ ໂດຍບໍ່ໃຫ້ຄວາມສໍາຄັນກ່ຽວກັບຊີວິດແມ່ນແຕ່ໜ້ອຍດຽວ, ມີແຕ່ສະແຫວງຫາສິ່ງຕ່າງໆພາຍນອກ (ເພາະພວກເຂົາບໍ່ມີຄຸນນະພາບຂອງເຮົາ, ບໍ່ວ່າພວກເຂົາຈະເຮັດຫຍັງກໍຕາມ ມັນກໍເປັນສິ່ງທີ່ຢູ່ພາຍນອກ) ແລະ ພວກເຂົາບໍ່ສາມາດເປັນຜູ້ຊ່ວຍທີ່ເກັ່ງຂອງເຮົາ, ສະນັ້ນ ພວກເຂົາຈຶ່ງຖືກເອີ້ນວ່າ "ຍິງສາວບໍລິສຸດທີ່ໂງ່ຈ້າ". "ຫ້າ" ດັ່ງທີ່ກ່າວມາກ່ອນແລ້ວ ເປັນຕົວແທນໃຫ້ກັບຊາຕານ ແລະ ຄວາມຈິງທີ່ພວກເຂົາຖືກເອີ້ນວ່າ "ຍິງສາວບໍລິສຸດ" ໝາຍຄວາມວ່າ ພວກເຂົາຖືກເຮົາເອົາຊະນະ ແລະ ສາມາດໃຫ້ການບໍລິການແກ່ເຮົາໄດ້, ແຕ່ຄົນປະເພດນີ້ກໍບໍ່ບໍລິສຸດ, ສະນັ້ນ ພວກເຂົາຈຶ່ງຖືກເອີ້ນວ່າຜູ້ໃຫ້ບໍລິການ.

# ບົດທີ 117

ພຣະອົງແມ່ນຜູ້ທີ່ເປີດໜັງສືມ້ວນ ແລະ ພຣະອົງແມ່ນຜູ້ທີ່ຫັກຕາປະທັບທັງເຈັດອອກ ຍ້ອນວ່າ ຄວາມລຶກລັບທັງໝົດມາຈາກພຣະອົງ ແລະ ພອນທັງໝົດຖືກເປີດເຜີຍໂດຍພຣະອົງ. ເຮົາຕັ້ງໜ້າທີ່ຈະຮັກພຣະອົງຕະຫຼອດໄປ ແລະ ເຮົາຕັ້ງໜ້າທີ່ຈະເຮັດໃຫ້ທຸກຄົນນະມັດສະການພຣະອົງ ຍ້ອນວ່າພຣະອົງແມ່ນຕົວຕົນຂອງເຮົາ; ພຣະອົງແມ່ນສ່ວນໜຶ່ງຂອງການສະແດງອອກທີ່ອຸດົມສົມບູນ ແລະ ຄົບຖ້ວນຂອງເຮົາ, ສ່ວນທີ່ຂາດບໍ່ໄດ້ໃນຮ່າງກາຍຂອງເຮົາ. ສະນັ້ນ, ເຮົາຕ້ອງໃຫ້ປະຈັກພະຍານເປັນພິເສດ. ມີໃຜແດ່ນອກຈາກຜູ້ທີ່ຢູ່ພາຍໃນຕົວຕົນຂອງເຮົາທີ່ຕາມໃຈເຮົາ? ບໍ່ແມ່ນພຣະອົງເອງທີ່ເປັນພະຍານໃຫ້ແກ່ພຣະອົງ, ແຕ່ແມ່ນພຣະວິນຍານຂອງເຮົາທີ່ເປັນພະຍານໃຫ້ແກ່ພຣະອົງ ແລະ ເຮົາຈະບໍ່ຍົກໂທດໃຫ້ໃຜກໍຕາມທີ່ກ້າທ້າທາຍພຣະອົງຢ່າງແນ່ນອນ ຍ້ອນວ່ານີ້ກ່ຽວຂ້ອງກັບບົດບັນຍັດການປົກຄອງຂອງເຮົາ. ທຸກສິ່ງທີ່ພຣະອົງກ່າວ, ເຮົາຈະເຮັດໃຫ້ສໍາເລັດຢ່າງແນ່ນອນ ແລະ ທຸກສິ່ງທີ່ພຣະອົງຄິດ, ເຮົາກໍຈະຍອມຮັບຢ່າງແນ່ນອນ. ຖ້າຜູ້ໃດຜູ້ໜຶ່ງບໍ່ຈິ່ງຮັກພັກດີຕໍ່ພຣະອົງ, ແລ້ວພວກເຂົາກໍຕໍ່ຕ້ານເຮົາຢ່າງເປີດເຜີຍ ແລະ ເຮົາຈະບໍ່ຍົກໂທດໃຫ້ພວກເຂົາຢ່າງແນ່ນອນ. ເຮົາຈະຂ້ຽນຕີທຸກຄົນທີ່ຕໍ່ຕ້ານລູກຊາຍຂອງເຮົາຢ່າງຮຸນແຮງ ແລະ ເຮົາຈະອວຍພອນບັນດາຜູ້ທີ່ເຂົ້າກັບພຣະອົງໄດ້. ນີ້ແມ່ນສິດອໍານາດທີ່ເຮົາມອບໃຫ້ພຣະອົງ. ໃນນັ້ນເຊິ່ງຖືກກ່າວເຖິງໃນອະດີດ, ຄວາມຮຽກຮ້ອງ ແລະ ມາດຕະຖານທີ່ຖືກວາງໄວ້ເທິງລູກຊາຍກົກ, ພຣະອົງແມ່ນແບບຢ່າງ. ນັ້ນໝາຍຄວາມວ່າ ເຮົາກໍຄວນຮຽກຮ້ອງໃຫ້ລູກຊາຍກົກເປັນແບບນັ້ນ. ນີ້ບໍ່ແມ່ນສິ່ງທີ່ມະນຸດສາມາດເຮັດໄດ້, ແຕ່ກົງກັນຂ້າມ ມັນແມ່ນສິ່ງທີ່ພຣະວິນຍານຂອງເຮົາເອງເປັນຜູ້ກະທໍາ. ຖ້າໃຜເຊື່ອວ່າແມ່ນມະນຸດທີ່ກໍາລັງເປັນພະຍານໃຫ້ແກ່ພຣະອົງ, ແລ້ວສິ່ງມີຊີວິດນັ້ນກໍເປັນພັກພວກຂອງຊາຕານ ແລະ ເປັນສັດຕູຂອງເຮົາຢ່າງບໍ່ຕ້ອງສົງໄສ! ສະນັ້ນ, ປະຈັກພະຍານຈຶ່ງແນ່ນອນ, ບໍ່ປ່ຽນແປງຊົ່ວນິລັນດອນ ແລະ ແມ່ນສິ່ງທີ່ພຣະວິນຍານບໍລິສຸດຢືນຢັນ! ບໍ່ມີໃຜອາດປ່ຽນແປງມັນໄດ້ຢ່າງງ່າຍດາຍ ແລະ ຖ້າຜູ້ໃດປ່ຽນແປງ, ເຮົາກໍຈະບໍ່ຍົກໂທດໃຫ້! ຍ້ອນມະນຸດບໍ່ສາມາດເປັນພະຍານໃຫ້ເຮົາໄດ້, ເຮົາຈຶ່ງເປັນພະຍານໃຫ້ແກ່ຕົວຕົນຂອງເຮົາດ້ວຍຕົວເຮົາເອງ ແລະ ຜູ້ຄົນຕ້ອງບໍ່ແຊກແຊງພາລະກິດຂອງເຮົາ! ສິ່ງເຫຼົ່ານີ້ແມ່ນພຣະທໍາແຫ່ງການພິພາກສາທີ່ຮຸນແຮງ ແລະ ທຸກໆຄົນຕ້ອງໃສ່ໃຈກັບພຣະທໍາເຫຼົ່ານັ້ນ!

ພວກເຈົ້າຄວນພິຈາລະນາ ແລະ ສັງເກດທຸກລາຍລະອຽດໃນສິ່ງທີ່ເຮົາກ່າວ. ຢ່າປະຕິບັດກັບພຣະທໍາຂອງເຮົາຕາມອໍາເພີໃຈ ແຕ່ຈົ່ງຕັ້ງໃຈຟັງໃຫ້ດີ. ເປັນຫຍັງເຮົາຈຶ່ງເວົ້າວ່າ ລູກຊາຍກົກແມ່ນຕົວຕົນຂອງເຮົາ ແລະ ແມ່ນສ່ວນທີ່ຂາດບໍ່ໄດ້ຂອງອານາຈັກຂອງເຮົາ? ກ່ອນທຸກຍຸກສະໄໝ, ພວກເຮົາອາໄສຢູ່ຮ່ວມກັນ ແລະ ບໍ່ເຄີຍຖືກແຍກຈາກກັນ. ຍ້ອນການຂັດຂວາງຂອງຊາຕານ, ຫຼັງຈາກທີ່ເຮົາໄດ້ບັງເກີດເປັນມະນຸດຄັ້ງທໍາອິດ ເຮົາກັບຄືນສູ່ຊີໂອນ. ຕໍ່ຈາກນີ້, ພວກເຮົາທຸກຄົນເຂົ້າມາໃນໂລກ ແລະ ຫຼັງຈາກທີ່ເຮົາໄດ້ຮັບໄຊຊະນະໃນຍຸກສຸດທ້າຍ ນັ້ນກໍຄື ຫຼັງຈາກທີ່ເຮົາໄດ້ພວກເຈົ້າກັບຄືນມາຈາກເນື້ອໜັງທີ່ຊາຕານໄດ້ເຮັດໃຫ້ເສື່ອມຊາມ, ເຮົາຈະນໍາເອົາພວກເຈົ້າກັບຄືນສູ່ຊີໂອນ ເພື່ອວ່າຕົວຕົນ

ຂອງເຮົາຈະກັບມາຢູ່ຮ່ວມກັນໃໝ່, ບໍ່ຖືກແຍກຈາກກັນອີກ. ຫຼັງຈາກນັ້ນ ເຮົາຈະບໍ່ບັງເກີດເປັນມະນຸດ ແລະ ພວກເຈົ້າຈະບໍ່ອອກມາຈາກຮ່າງກາຍຂອງເຮົາຢ່າງແນ່ນອນ. ນັ້ນໝາຍຄວາມວ່າ ຫຼັງຈາກນັ້ນເປັນຕົ້ນໄປ ເຮົາຈະບໍ່ສ້າງໂລກອີກ, ແຕ່ຈະຄົງຢູ່ຕະຫຼອດໄປໂດຍບໍ່ສາມາດແຍກອອກໄດ້ຈາກລູກຊາຍກົກຂອງເຮົາໃນຊີໂອນ ຍ້ອນວ່າທຸກສິ່ງໄດ້ສຳເລັດລົງຢ່າງຄົບຖ້ວນແລ້ວໃນຕອນນີ້ ແລະ ເຮົາກຳລັງຈະສິ້ນສຸດຍຸກເກົ່າແກ່ທັງໝົດ. ມັນແມ່ນຢູ່ຊີໂອນເທົ່ານັ້ນທີ່ມີຊີວິດໃນສະຫວັນ ແລະ ແຜ່ນດິນໂລກໃໝ່ ຍ້ອນວ່າຕົວຕົນຂອງເຮົາມີຢູ່ໃນຊີໂອນ. ຈະບໍ່ມີສະຫວັນໃໝ່ ຫຼື ແຜ່ນດິນໂລກໃໝ່ອີກຕໍ່ໄປ ນອກເໜືອຈາກນີ້. ເຮົາແມ່ນສະຫວັນໃໝ່ ແລະ ເຮົາຍັງເປັນແຜ່ນດິນໂລກໃໝ່ດ້ວຍ, ຍ້ອນວ່າຕົວຕົນຂອງເຮົາຕື່ມເຕັມທົ່ວຊີໂອນ. ມັນອາດເວົ້າໄດ້ເຊັ່ນກັນວ່າລູກຊາຍກົກຂອງເຮົາແມ່ນສະຫວັນໃໝ່, ລູກຊາຍກົກຂອງເຮົາແມ່ນແຜ່ນດິນໂລກໃໝ່. ລູກຊາຍກົກຂອງເຮົາ ແລະ ເຮົາມີຮ່າງກາຍດຽວກັນ ເຊິ່ງບໍ່ສາມາດແຍກອອກຈາກກັນໄດ້. ການເວົ້າເຖິງເຮົາຈຳເປັນຕ້ອງລວມເອົາລູກຊາຍກົກຂອງເຮົານຳ ແລະ ເຮົາຈະບໍ່ຍົກໂທດໃຫ້ໃຜກໍຕາມທີ່ພະຍາຍາມແຍກພວກເຮົາອອກຈາກກັນຢ່າງແນ່ນອນ. ເມື່ອເຮົາເຮັດໃຫ້ທຸກຊົນຊາດ ແລະ ທຸກຄົນກັບຄືນມາຢູ່ຕໍ່ໜ້າບັນລັງຂອງເຮົາ, ຊາຕານທັງຫຼາຍຈະຕ້ອງອັບອາຍຂາຍໜ້າຢ່າງທົ່ວເຖິງ ແລະ ຜີຮ້າຍທີ່ຊົ່ວຊ້າທັງຫຼາຍຈະຖອຍໜີອອກຈາກເຮົາ. ເມື່ອນັ້ນ ແນ່ນອນວ່າຄວາມຊອບທຳຈະດຳລົງຢູ່ທ່າມກາງທຸກຄົນ (ໝາຍເຖິງທ່າມກາງລູກຊາຍ ແລະ ຄົນຂອງເຮົາ) ແລະ ແນ່ນອນວ່າຈະບໍ່ມີການຂັດຂວາງຂອງຊາຕານໃນທ່າມກາງທຸກຊົນຊາດ ຍ້ອນວ່າເຮົາຈະປົກຄອງທຸກຊົນຊາດ ແລະ ທຸກຄົນ, ເຮົາຈະຖືອຳນາດເໜືອໂລກຈັກກະວານທັງໝົດ ແລະ ຊາຕານທຸກໂຕຈະຖືກທຳລາຍຢ່າງທົ່ວເຖິງ, ຖືກເອົາຊະນະຢ່າງສິ້ນເຊີງ ແລະ ໄດ້ຮັບການລົງໂທດແຫ່ງບົດບັນຍັດການປົກຄອງຂອງເຮົາ.

ເຮົາກຳລັງດຳເນີນພາລະກິດຂອງເຮົາທ່າມກາງທຸກຄົນ, ແຕ່ພວກເຂົາມີພຽງແຕ່ມີການສ່ອງສະຫວ່າງຂອງພຣະວິນຍານຂອງເຮົາເທົ່ານັ້ນ ແລະ ບໍ່ມີໃຜໃນບັນດາພວກເຂົາທີ່ມີຄຸນສົມບັດໃນການເປີດເຜີຍຂໍ້ລຶກລັບຂອງເຮົາ, ບໍ່ມີໃຜມີຄຸນສົມບັດທີ່ຈະສະແດງຕົວເຮົາ. ມີພຽງຜູ້ທີ່ມາຈາກເຮົາເທົ່ານັ້ນຈຶ່ງມີຄຸນສົມບັດທີ່ຈະປະຕິບັດພາລະກິດຂອງເຮົາ, ສ່ວນຄົນທີ່ເຫຼືອແມ່ນເຮົາພຽງແຕ່ໃຊ້ພວກເຂົາຊົ່ວຄາວເທົ່ານັ້ນ. ພຣະວິນຍານຂອງເຮົາຈະບໍ່ລົງມາຫາຄົນຕາມອຳເພີໃຈ ຍ້ອນວ່າທຸກສິ່ງໃນເຮົານັ້ນລ້ຳຄ່າ. ເພື່ອໃຫ້ພຣະວິນຍານຂອງເຮົາທີ່ຈະລົງມາສູ່ຜູ້ໃດຜູ້ໜຶ່ງ ແລະ ເພື່ອໃຫ້ພຣະວິນຍານຂອງເຮົາປະຕິບັດພາລະກິດໃນຜູ້ໃດຜູ້ໜຶ່ງແມ່ນສິ່ງທີ່ແຕກຕ່າງກັນຢ່າງສິ້ນເຊີງ. ພຣະວິນຍານຂອງເຮົາປະຕິບັດພາລະກິດໃນຄົນທີ່ຢູ່ຂ້າງນອກຕົວເຮົາ, ແຕ່ພຣະວິນຍານຂອງເຮົາລົງມາເທິງຜູ້ທີ່ມາຈາກເຮົາ. ສິ່ງເຫຼົ່ານີ້ແມ່ນສອງເລື່ອງທີ່ບໍ່ກ່ຽວຂ້ອງກັນຢ່າງສິ້ນເຊີງ. ຍ້ອນຜູ້ທີ່ມາຈາກເຮົານັ້ນບໍລິສຸດ, ແຕ່ບັນດາຜູ້ທີ່ຢູ່ຂ້າງນອກເຮົານັ້ນບໍ່ບໍລິສຸດ, ບໍ່ວ່າພວກເຂົາຈະດີພຽງໃດກໍຕາມ. ພຣະວິນຍານຂອງເຮົາຈະບໍ່ລົງມາຫາຜູ້ໃດຜູ້ໜຶ່ງຍ້ອນເຫດຜົນນ້ອຍໆ. ຄົນບໍ່ຄວນກັງວົນໃຈ. ເຮົາບໍ່ເຮັດຜິດ ແລະ ເຮົາແນ່ໃຈຮ້ອຍເປີເຊັນໃນສິ່ງທີ່ເຮົາກະທຳ! ດັ່ງທີ່ເຮົາໄດ້ເປັນພະຍານໃຫ້ພຣະອົງ, ແນ່ນອນວ່າເຮົາຈະປົກປ້ອງພຣະອົງດ້ວຍ; ຜູ້ນັ້ນມາຈາກເຮົາຢ່າງແນ່ນອນ ແລະ ຂາດບໍ່ໄດ້ໃນຕົວຕົນຂອງເຮົາ. ສະນັ້ນ, ເຮົາຫວັງວ່າຄົນຈະປະຖິ້ມແນວຄວາມຄິດຂອງພວກເຂົາເອງ, ໂຍນຖິ້ມຄວາມຄິດທີ່ຊາຕານມອບໃຫ້, ເຊື່ອໃນພຣະຄຳທຸກຂໍ້ຂອງ

ເຮົາວ່າເປັນຄວາມຈິງ ແລະ ບໍ່ເປີດທາງໃຫ້ເກີດຄວາມສົງໄສຢູ່ໃນຄວາມຄິດຂອງພວກເຂົາ. ນີ້ແມ່ນການມອບໝາຍຂອງເຮົາຕໍ່ມະນຸດຊາດ, ຄຳແນະນຳຂອງເຮົາຕໍ່ມະນຸດຊາດ. ທຸກຄົນຕ້ອງຍຶດໝັ້ນໃນສິ່ງເຫຼົ່ານີ້, ທຸກຄົນຕ້ອງເຊື່ອຟັງສິ່ງເຫຼົ່ານີ້ຢ່າງຈິງໃຈ ແລະ ທຸກຄົນຕ້ອງຖືເອົາສິ່ງທີ່ເຮົາກ່າວເປັນມາດຕະຖານ.

ເຮົາບໍ່ພຽງແຕ່ກຳລັງຈະເລີ່ມປະຕິບັດພາລະກິດຂອງເຮົາທ່າມກາງທຸກຊົນຊາດ ແລະ ທຸກຄົນ, ແຕ່ກຳລັງເລີ່ມປະຕິບັດພາລະກິດຂອງເຮົາຢູ່ທົ່ວທຸກບ່ອນໃນໂລກຈັກກະວານ ແລະ ສິ່ງນີ້ກໍສະແດງໃຫ້ເຫັນຫຼາຍຍິ່ງຂຶ້ນວ່າວັນສຳລັບການກັບຄືນສູ່ຊີໂອນຂອງເຮົານັ້ນຢູ່ອີກບໍ່ໄກ (ຍ້ອນວ່າມັນຈຳເປັນສຳລັບເຮົາທີ່ຈະກັບຄືນມາສູ່ຊີໂອນກ່ອນທີ່ເຮົາຈະສາມາດເລີ່ມຕົ້ນພາລະກິດທ່າມກາງທຸກຄົນ ແລະ ທົ່ວໂລກຈັກກະວານ). ມີໃຜທີ່ສາມາດເຂົ້າໃຈບາດກ້າວຂອງພາລະກິດຂອງເຮົາ ແລະ ວິທີທີ່ເຮົາປະຕິບັດພາລະກິດບໍ? ເຫດຜົນທີ່ເຮົາເວົ້າວ່າເຮົາຈະພົບປະກັບຄົນຕ່າງຊາດໃນວິນຍານກໍຍ້ອນວ່າ ໂດຍພື້ນຖານແລ້ວ ສິ່ງນີ້ບໍ່ສາມາດຖືກເຮັດໃຫ້ສຳເລັດໄດ້ໃນເນື້ອໜັງ ແລະ ຍ້ອນວ່າເຮົາບໍ່ເຕັມໃຈທີ່ຈະສ່ຽງອັນຕະລາຍເປັນຄັ້ງທີສອງ. ສິ່ງເຫຼົ່ານີ້ແມ່ນເຫດຜົນສຳລັບການສື່ສານກັບຄົນຕ່າງຊາດໃນວິນຍານ. ສິ່ງນີ້ແມ່ນການຢູ່ໃນໂລກຝ່າຍວິນຍານທີ່ແທ້ຈິງ, ບໍ່ແມ່ນບາງໂລກຝ່າຍວິນຍານທີ່ເລື່ອນລອຍດັ່ງທີ່ບັນດາຜູ້ທີ່ມີຊີວິດໃນເນື້ອໜັງຈິນຕະນາການ[ກ]. ສິ່ງທີ່ເຮົາກ່າວໃນເວລານັ້ນແມ່ນແຕກຕ່າງພຽງແຕ່ໃນວິທີທີ່ເຮົາກ່າວ ເພາະເຮົາຈະກ່າວຢູ່ພາຍໃນຍຸກທີ່ແຕກຕ່າງກັນ. ເພາະສະນັ້ນ, ເຮົາກຳລັງເຕືອນມະນຸດຊາດຊ້ຳໄປຊ້ຳມາໃຫ້ສັງເກດວິທີທີ່ເຮົາກ່າວ ແລະ ເຮົາຍັງໄດ້ເຕືອນມະນຸດຊາດອີກວ່າ ມີຄວາມລຶກລັບໃນສິ່ງທີ່ເຮົາກ່າວເຊິ່ງຄົນບໍ່ສາມາດເປີດເຜີຍໄດ້. ແຕ່ບໍ່ມີໃຜເຂົ້າໃຈວ່າເປັນຫຍັງເຮົາຈຶ່ງກ່າວສິ່ງເຫຼົ່ານີ້ ແລະ ມີແຕ່ເມື່ອເຮົາບອກພວກເຈົ້າໃນມື້ນີ້ວ່າ ພວກເຈົ້າຈຶ່ງສາມາດເຂົ້າໃຈເລັກນ້ອຍ ແຕ່ຍັງບໍ່ທັນເຂົ້າໃຈຢ່າງຖີ່ຖ້ວນ. ຫຼັງຈາກຂັ້ນຕອນນີ້ໃນພາລະກິດຂອງເຮົາ, ເຮົາຈະແຈ້ງພວກເຈົ້າເທື່ອລະບາດກ້າວ. (ເຮົາຍັງຢາກກຳຈັດບາງຄົນຜ່ານສິ່ງນີ້, ດັ່ງນັ້ນເຮົາຈຶ່ງຈະບໍ່ເວົ້າຫຍັງອີກໃນຕອນນີ້). ນີ້ແມ່ນວິທີການຂອງບາດກ້າວຕໍ່ໄປໃນພາລະກິດຂອງເຮົາ. ທຸກຄົນຄວນສັງເກດ ແລະ ເຫັນຢ່າງຊັດເຈນວ່າເຮົາແມ່ນພຣະເຈົ້າທີ່ມີສະຕິປັນຍາ.

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ "ດັ່ງທີ່ບັນດາຜູ້ທີ່ມີຊີວິດໃນເນື້ອໜັງຈິນຕະນາການ".

# ບົດທີ 118

ຜູ້ໃດກໍຕາມທີ່ລຸກຂຶ້ນເປັນພະຍານໃຫ້ແກ່ພຣະບຸດຂອງເຮົາ, ເຮົາຈະປະທານພຣະຄຸນໃຫ້ແກ່ພວກເຂົາ; ຜູ້ໃດກໍຕາມທີ່ບໍ່ລຸກຂຶ້ນເປັນພະຍານໃຫ້ແກ່ພຣະບຸດຂອງເຮົາ ແຕ່ກົງກັນຂ້າມ ພວກເຂົາຕໍ່ຕ້ານ ແລະ ໃຊ້ແນວຄິດມະນຸດເພື່ອປະເມີນການດ້ວຍຕົວພວກເຂົາເອງ ເຮົາກໍຈະທຳລາຍພວກເຂົາ. ທຸກຄົນຕ້ອງໄດ້ເຫັນຢ່າງຊັດເຈນ! ການເປັນພະຍານໃຫ້ກັບພຣະບຸດຂອງເຮົາແມ່ນການກະທຳທີ່ເຄົາລົບນັບຖືເຮົາ ແລະ ມັນເປັນໄປຕາມຄວາມປະສົງຂອງເຮົາ. ຢ່າພຽງແຕ່ເຄົາລົບພຣະບິດາ, ໃນຂະນະທີ່ຂົ່ມເຫັງ ແລະ ກົດຂີ່ພຣະບຸດ. ຄົນທີ່ເຮັດແບບນັ້ນກໍເປັນເຊື້ອສາຍຂອງມັງກອນແດງຜູ້ຍິ່ງໃຫຍ່. ເຮົາບໍ່ຕ້ອງການຄົນເວດທະນາແບບນີ້ໃຫ້ເປັນພະຍານແກ່ພຣະບຸດຂອງເຮົາ; ເຮົາຈະທຳລາຍພວກເຂົາໃນຂຸມເລິກທີ່ບໍ່ສິ້ນສຸດ. ເຮົາຕ້ອງການຜູ້ໃຫ້ບໍລິການທີ່ຈິ່ງຮັກພັກດີ ແລະ ຊື່ສັດເພື່ອໃຫ້ບໍລິການແກ່ພຣະບຸດຂອງເຮົາ; ສ່ວນຄົນທີ່ເຫຼືອ ເຮົາບໍ່ຕ້ອງການພວກເຂົາ. ນີ້ແມ່ນອຸປະນິໄສທີ່ຊອບທຳຂອງເຮົາ ແລະ ມັນເຮັດໜ້າທີ່ເພື່ອສະແດງວ່າ ເຮົາເປັນພຣະເຈົ້າທີ່ບໍລິສຸດ ແລະ ໄຮ້ມົນທິນ. ເຮົາຈະບໍ່ໃຫ້ອະໄພຜູ້ໃດກໍຕາມທີ່ເຮັດຜິດບົດບັນຍັດການປົກຄອງຂອງເຮົາ. ຜູ້ໃດກໍຕາມທີ່ທ້າທາຍພຣະອົງ ຫຼື ຂົ່ມເຫັງພຣະອົງໃນອະດີດ, ບໍ່ວ່າຈະຢູ່ໃນຄອບຄົວ ຫຼື ຢູ່ໃນໂລກ, ເຮົາຈະຂ້ຽນຕີພວກເຂົາເທື່ອລະຄົນ ແລະ ຈະບໍ່ມີຜູ້ໃດຖືກປ່ອຍໄປ ຍ້ອນບໍ່ມີສ່ວນໃດສ່ວນໜຶ່ງໃນເຮົາທີ່ມາຈາກເນື້ອໜັງ ແລະ ເລືອດ. ການເປັນພະຍານໃຫ້ແກ່ພຣະອົງໃນມື້ນີ້ກໍສະແດງວ່າ ຜູ້ໃຫ້ບໍລິການເຫຼົ່ານີ້ໄດ້ສຳເລັດການໃຫ້ບໍລິການແກ່ເຮົາ, ສະນັ້ນ ຢ່າລັງເລໃຈ ຫຼື ກັງວົນໃຈແຕ່ຢ່າງໃດເລີຍ. ໃນທີ່ສຸດແລ້ວ ພວກເຂົາເປັນຜູ້ໃຫ້ບໍລິການຂອງພຣະອົງ ແລະ ເມື່ອທຸກສິ່ງຖືກເວົ້າອອກ ແລະ ຖືກປະຕິບັດ ພຣະອົງກໍເປັນຂອງສະຫວັນ ແລະ ພຣະອົງຈະກັບຄືນສູ່ຮ່າງກາຍຂອງເຮົາໃນທີ່ສຸດ ຍ້ອນຮ່າງກາຍຂອງເຮົາບໍ່ສາມາດຂາດພຣະອົງໄປໄດ້. ຄົນທີ່ທ້າທາຍພຣະອົງ ແລະ ຄົນທີ່ບໍ່ສາມາດເຂົ້າກັນກັບພຣະອົງໄດ້ໃນອະດີດ (ນີ້ແມ່ນສິ່ງທີ່ຄົນອື່ນໆບໍ່ສາມາດເຫັນໄດ້; ມີພຽງແຕ່ພຣະອົງເທົ່ານັ້ນທີ່ຮູ້ມັນຢູ່ໃນຫົວໃຈຂອງພຣະອົງ) ໄດ້ເປີດເຜີຍຮູບແບບເດີມຂອງພວກເຂົາໃນຕອນນີ້ ແລະ ໄດ້ລົ້ມລົງ ຍ້ອນພຣະອົງເປັນພຣະເຈົ້າ ແລະ ພຣະອົງຈະບໍ່ອົດທົນກັບຜູ້ໃດກໍຕາມທີ່ທ້າທາຍພຣະອົງ ຫຼື ລ່ວງເກີນພຣະອົງ. ເຖິງແມ່ນມັນບໍ່ສາມາດເຫັນໄດ້ເລີຍຈາກພາຍນອກ, ພຣະວິນຍານຂອງເຮົາກໍຢູ່ພາຍໃນພຣະອົງ; ສິ່ງນີ້ແມ່ນບໍ່ຕ້ອງສົງໄສເລີຍ. ທຸກຄົນຕ້ອງເຊື່ອເພື່ອບໍ່ໃຫ້ທ່ອນເຫຼັກຂອງເຮົາໂຈມຕີທຸກຄົນທີ່ທ້າທາຍເຮົາໃຫ້ລົ້ມລົງ! ຍ້ອນເຮົາເປັນພະຍານໃຫ້ແກ່ພຣະອົງ, ພຣະອົງກໍມີສິດອຳນາດຢ່າງແນ່ນອນ ແລະ ທຸກສິ່ງທີ່ພຣະອົງກ່າວກໍເປັນຄຳເວົ້າຂອງເຮົາ ແລະ ທຸກສິ່ງທີ່ພຣະອົງເຮັດກໍເປັນການສະແດງອອກຂອງເຮົາ ຍ້ອນພຣະອົງເປັນຜູ້ອັນເປັນທີ່ຮັກຂອງເຮົາ ແລະ ພຣະອົງເປັນສ່ວນໜຶ່ງທີ່ຕົວຕົນຂອງເຮົາບໍ່ສາມາດຂາດໄດ້. ແລ້ວທຸກການກະທຳຂອງພຣະອົງ, ສິ່ງທີ່ພຣະອົງສວມໃສ່, ສິ່ງທີ່ພຣະອົງໃຊ້ ແລະ ບ່ອນທີ່ພຣະອົງອາໄສຢູ່, ແນ່ນອນ ພວກມັນກໍເປັນການກະທຳຂອງເຮົາ. ບໍ່ມີຜູ້ໃດທີ່ຕ້ອງພະຍາຍາມຄົ້ນຫາບາງສິ່ງມາຕໍ່ຕ້ານພຣະອົງ ແລະ ບໍ່ມີຜູ້ໃດທີ່ຕ້ອງພະຍາຍາມຈັບຜິດພຣະອົງ. ຖ້າຜູ້ໃດຜູ້ໜຶ່ງເຮັດແບບນີ້, ເຮົາຈະບໍ່ໃຫ້ອະໄພພວກເຂົາ!

ເຮົາຈະໂຍນຜູ້ຮັບໃຊ້ທີ່ຊົ່ວຮ້າຍທັງໝົດອອກຈາກເຮືອນຂອງເຮົາ ແລະ ພາຍໃນເຮືອນຂອງເຮົາ ເຮົາຈະເຮັດໃຫ້ຜູ້ຮັບໃຊ້ທີ່ຈົ່ງຮັກພັກດີທັງໝົດເປັນພະຍານໃຫ້ກັບລູກຊາຍກົກຂອງເຮົາ; ນີ້ແມ່ນແຜນການຂອງເຮົາ ແລະ ນີ້ແມ່ນວິທີທີ່ເຮົາປະຕິບັດພາລະກິດ. ເມື່ອຜູ້ຮັບໃຊ້ທີ່ຊົ່ວຮ້າຍເປັນພະຍານໃຫ້ກັບພຣະບຸດຂອງເຮົາ ມັນຈະມີກິ່ນເໝັນຂອງຄົນຕາຍ ແລະ ສິ່ງນີ້ເປັນຕາລັງກຽດສຳລັບເຮົາ. ເມື່ອຜູ້ຮັບໃຊ້ທີ່ຈົ່ງຮັກພັກດີເປັນພະຍານໃຫ້ແກ່ພຣະບຸດຂອງເຮົາ, ມັນກໍຈິງຈັງ ແລະ ຈິງໃຈ ແລະ ມັນສາມາດຍອມຮັບໄດ້ສຳລັບເຮົາ. ສະນັ້ນ, ຜູ້ໃດກໍຕາມທີ່ບໍ່ເຕັມໃຈເປັນພະຍານໃຫ້ກັບພຣະບຸດຂອງເຮົາໃຫ້ອອກຈາກທີ່ນີ້ໃນຕອນນີ້! ເຮົາຈະບໍ່ບັງຄັບເຈົ້າໃຫ້ເຮັດແບບນັ້ນ ນັ້ນກໍຄື ຖ້າເຮົາຂໍໃຫ້ເຈົ້າອອກໄປແລ້ວເຈົ້າກໍຕ້ອງອອກໄປ! ໃຫ້ເບິ່ງວ່າ ແມ່ນຫຍັງຄືຜົນຕາມມາສຳລັບເຈົ້າ ແລະ ແມ່ນຫຍັງລໍຖ້າເຈົ້າຢູ່; ຄົນທີ່ໃຫ້ບໍລິການກໍເຂົ້າໃຈສິ່ງນີ້ຫຼາຍກວ່າຄົນອື່ນໆ. ການພິພາກສາຂອງເຮົາ, ຄວາມໂກດຮ້າຍຂອງເຮົາ, ການສາບແຊ່ງຂອງເຮົາ, ການເຜົາໄໝ້ຂອງເຮົາ ແລະ ຄວາມໂມໂຫທີ່ລຸກໄໝ້ຂອງເຮົາຈະເກີດຂຶ້ນໄດ້ທຸກເວລາກັບຜູ້ທີ່ທ້າທາຍເຮົາ. ມືຂອງເຮົາບໍ່ສະແດງຄວາມເມດຕາຕໍ່ຜູ້ໃດກໍຕາມ; ບໍ່ວ່າຜູ້ທີ່ໃຫ້ບໍລິການຈະຈົ່ງຮັກພັກດີຫຼາຍສໍ່າໃດໃນເມື່ອກ່ອນ, ຖ້າພວກເຂົາທ້າທາຍພຣະບຸດຂອງເຮົາໃນມື້ນີ້ແລ້ວເຮົາກໍຈະທຳລາຍພວກເຂົາທັນທີ ແລະ ເຮົາຈະບໍ່ປ່ອຍໃຫ້ພວກເຂົາຢູ່ຕໍ່ໜ້າເຮົາ. ຈາກນີ້ ຄົນໃດໜຶ່ງສາມາດເຫັນໄດ້ເຖິງມືທີ່ໄຮ້ຄວາມປານີຂອງເຮົາ. ເພາະຜູ້ຄົນບໍ່ຮູ້ຈັກເຮົາ ແລະ ເພາະທຳມະຊາດຂອງພວກເຂົາທ້າທາຍເຮົາ, ແມ່ນແຕ່ຄົນທີ່ຈົ່ງຮັກພັກດີຕໍ່ເຮົາກໍພຽງແຕ່ຈົ່ງຮັກພັກດີເພື່ອເຫັນແກ່ຄວາມສຸກຂອງພວກເຂົາເອງ. ຖ້າມີບາງສິ່ງບາງຢ່າງເກີດຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ພວກເຂົາໃນທາງທີ່ບໍ່ດີ, ຫົວໃຈຂອງພວກເຂົາກໍປ່ຽນໄປທັນທີ ແລະ ພວກເຂົາຕ້ອງການທີ່ຈະຖອຍອອກຈາກຂ້າງກາຍເຮົາ. ນີ້ແມ່ນທຳມະຊາດຂອງຊາຕານ. ພວກເຈົ້າຕ້ອງບໍ່ດື້ດຶງ ໂດຍເຊື່ອວ່າຕົນເອງຈົ່ງຮັກພັກດີ! ຖ້າບໍ່ມີຫຍັງໃນສິ່ງເຫຼົ່ານັ້ນໃຫ້ກັບພວກເຂົາ, ສັດຮ້າຍຝູງນີ້ກໍບໍ່ສາມາດຈົ່ງຮັກພັກດີຕໍ່ເຮົາໄດ້ເລີຍ. ຖ້າເຮົາບໍ່ປະກາດບົດບັນຍັດການປົກຄອງຂອງເຮົາ, ພວກເຈົ້າກໍຈະຖອນຕົວຕັ້ງແຕ່ດົນແລ້ວ. ໃນຕອນນີ້ ພວກເຈົ້າທຸກຄົນຕົກຢູ່ລະຫວ່າງໝໍ້ກະທະ ແລະ ໄຟ ໂດຍບໍ່ເຕັມໃຈທີ່ຈະໃຫ້ບໍລິການແກ່ເຮົາ ແຕ່ບໍ່ເຕັມໃຈທີ່ຈະຖືກມືຂອງເຮົາໂຈມຕີໃຫ້ລົ້ມລົງ. ຖ້າເຮົາບໍ່ປະກາດວ່າ ໄພພິບັດທີ່ຍິ່ງໃຫຍ່ຈະເກີດຂຶ້ນຕໍ່ຜູ້ໃດກໍຕາມທີ່ທ້າທາຍເຮົາໃນເວລາໃດກໍຕາມ, ພວກເຈົ້າກໍຈະຖອນຕົວຕັ້ງແຕ່ດົນແລ້ວ. ເຮົາບໍ່ຮູ້ເຖິງກົນອຸບາຍທີ່ຜູ້ຄົນໃຊ້ບໍ? ຕອນນີ້ ຄົນສ່ວນໃຫຍ່ມີຄວາມຫວັງເລັກໆນ້ອຍໆ, ແຕ່ເມື່ອຄວາມຫວັງນັ້ນກາຍເປັນຄວາມຜິດຫວັງ, ພວກເຂົາກໍບໍ່ເຕັມໃຈທີ່ຈະໄປໄກກວ່ານັ້ນ ແລະ ພວກເຂົາຮຽກຮ້ອງທີ່ຈະຫັນຫຼັງກັບ. ເຮົາໄດ້ເວົ້າກ່ອນໜ້າແລ້ວວ່າ ເຮົາບໍ່ເກັບຮັກສາຜູ້ໃດກໍຕາມໃຫ້ຢູ່ທີ່ນີ້ໂດຍທີ່ພວກເຂົາບໍ່ເຕັມໃຈ, ແຕ່ເອົາໃຈໃສ່ຄິດວ່າ ແມ່ນຫຍັງຈະເປັນຜົນຕາມມາສຳລັບເຈົ້າ. ນີ້ບໍ່ແມ່ນວ່າເຮົາກຳລັງຂົ່ມຂູ່ເຈົ້າ; ນີ້ແມ່ນກ່ຽວກັບຂໍ້ແທ້ຈິງ. ບໍ່ມີຜູ້ໃດສາມາດຢັ່ງເຖິງທຳມະຊາດຂອງມະນຸດໄດ້ ນອກຈາກເຮົາ; ທຸກຄົນຄິດວ່າພວກເຂົາຈົ່ງຮັກພັກດີຕໍ່ເຮົາ ໂດຍບໍ່ຮູ້ວ່າຄວາມຈົ່ງຮັກພັກດີຂອງພວກເຂົານັ້ນບໍ່ບໍລິສຸດ. ຄວາມບໍ່ບໍລິສຸດເຫຼົ່ານີ້ຈະທຳລາຍຜູ້ຄົນ ຍ້ອນພວກມັນເປັນກົນອຸບາຍຂອງມັງກອນແດງຜູ້ຍິ່ງໃຫຍ່. ມັນຖືກເປີດເຜີຍອອກໂດຍເຮົາຕັ້ງແຕ່ດົນມາແລ້ວ; ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດ, ແລ້ວເຮົາຈະ

ບໍ່ສາມາດເຂົ້າໃຈສິ່ງທີ່ງ່າຍດາຍແບບນີ້ບໍ? ເຮົາສາມາດແຊກຊຶມເຂົ້າໄປໃນເລືອດຂອງເຈົ້າ ແລະ ເນື້ອໜັງຂອງເຈົ້າເພື່ອເບິ່ງເຈດຕະນາຂອງເຈົ້າ. ມັນບໍ່ໄດ້ຍາກສຳລັບເຮົາທີ່ຈະຢັ່ງເຖິງທຳມະຊາດຂອງມະນຸດ, ແຕ່ຜູ້ຄົນຄິດວ່າຕົນເອງສະຫຼາດ ໂດຍເຊື່ອວ່າບໍ່ມີຜູ້ໃດຮູ້ຈັກເຈດຕະນາຂອງພວກເຂົາ ນອກຈາກພວກເຂົາເອງ. ພວກເຂົາບໍ່ຮູ້ບໍວ່າ ພຣະເຈົ້າອົງຊົງລິດທານຸພາບສູງສຸດເປັນຢູ່ພາຍໃນສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງ?

ເຮົາຈະຮັກພຣະບຸດຂອງເຮົາຈົນເຖິງທີ່ສຸດ ແລະ ເຮົາຈະກຽດຊັງມັງກອນແດງຜູ້ຍິ່ງໃຫຍ່ ແລະ ຊາຕານຕະຫຼອດໄປເປັນນິດ. ການຂ້ຽນຕີຂອງເຮົາຈະເກີດຂຶ້ນກັບທຸກຄົນທີ່ທ້າທາຍເຮົາ ແລະ ບໍ່ມີສັດຕູແມ່ນແຕ່ຄົນດຽວຈະຖືກປ່ອຍໄປ. ເຮົາໄດ້ເວົ້າກ່ອນໜ້ານີ້ແລ້ວວ່າ “ເຮົາໄດ້ວາງສິລາໃຫຍ່ໄວ້ໃນຊີໂອນ. ສຳລັບຜູ້ທີ່ເຊື່ອ ສິລານີ້ເປັນພື້ນຖານສຳລັບການກໍ່ສ້າງຂອງພວກເຂົາ. ສຳລັບຄົນທີ່ບໍ່ເຊື່ອນີ້ແມ່ນສິລາທີ່ພວກເຂົາສະດຸດ. ສຳລັບລູກຊາຍຂອງມານຮ້າຍ ນີ້ແມ່ນສິລາທີ່ບົດພວກເຂົາໃຫ້ແຫຼກຈົນຕາຍ”. ເຮົາບໍ່ພຽງແຕ່ກ່າວພຣະທຳເຫຼົ່ານີ້ໃນເມື່ອກ່ອນ, ແຕ່ພຣະທຳເຫຼົ່ານີ້ຖືກທຳນາຍໂດຍຫຼາຍຄົນ ແລະ ຫຼາຍຄົນກໍໄດ້ອ່ານຂໍ້ຄວາມນີ້ໃນພຣະທຳທີ່ຢູ່ໃນຍຸກນີ້. ຍິ່ງໄປກວ່ານັ້ນ ບາງຄົນໄດ້ພະຍາຍາມອະທິບາຍພຣະທຳເຫຼົ່ານີ້, ແຕ່ບໍ່ມີຜູ້ໃດເຄີຍແກ້ຄວາມລຶກລັບນີ້ມາກ່ອນ, ເພາະພາລະກິດນີ້ພຽງແຕ່ເກີດຂຶ້ນໃນຊ່ວງເວລາໃນປັດຈຸບັນແຫ່ງຍຸກສຸດທ້າຍ. ສະນັ້ນ ເຖິງແມ່ນບາງຄົນໄດ້ພະຍາຍາມອະທິບາຍພຣະທຳເຫຼົ່ານີ້, ການອະທິບາຍຂອງພວກເຂົາກໍລ້ວນແລ້ວແຕ່ເປັນການຫຼອກລວງ. ມື້ນີ້ ເຮົາໄດ້ເປີດເຜີຍຄວາມໝາຍທັງໝົດໃຫ້ແກ່ພວກເຈົ້າ ເພື່ອວ່າພວກເຈົ້າອາດຮູ້ຈັກຄວາມຈິງຈັງຂອງການທີ່ເຮົາເປັນພະຍານໃຫ້ແກ່ລູກຊາຍກົກຂອງເຮົາ ແລະ ຈຸດປະສົງຂອງເຮົາໃນການທີ່ເຮັດແບບນັ້ນ. ເຮົາວາງສິລາໃຫຍ່ໄວ້ຢູ່ໃນຊີໂອນ ແລະ ສິລານີ້ໝາຍເຖິງລູກຊາຍກົກຂອງເຮົາທີ່ໄດ້ຮັບການເປັນພະຍານ. ຄຳວ່າ “ໃຫຍ່” ບໍ່ໄດ້ໝາຍຄວາມວ່າ ພະຍານນີ້ເກີດຂຶ້ນໃນຂະໜາດໃຫຍ່ໂຕ, ແຕ່ກົງກັນຂ້າມ ໃນການເປັນພະຍານໃຫ້ແກ່ລູກຊາຍກົກຂອງເຮົາ ຜູ້ໃຫ້ບໍລິການຈຳນວນຫຼວງຫຼາຍຈະຖອນຕົວ. ໃນທີ່ນີ້ “ຄົນທີ່ບໍ່ເຊື່ອ” ໝາຍເຖິງຄົນທີ່ຖອນຕົວ ເພາະພຣະບຸດຂອງເຮົາໄດ້ຮັບການເປັນພະຍານ. ສະນັ້ນ ສິລາດັ່ງກ່າວແມ່ນກ້ອນຫີນສະດຸດສຳລັບຄົນປະເພດນີ້. ເຮົາເວົ້າວ່າ ມັນເປັນສິລາ ເພາະຄົນປະເພດນີ້ຈະຖືກໂຈມຕີໃຫ້ລົ້ມລົງໂດຍມືຂອງເຮົາ ແລະ ສະນັ້ນ ການກ່າວເຖິງ “ສິລາທີ່ເຮັດໃຫ້ຜູ້ຄົນສະດຸດ” ແມ່ນບໍ່ໄດ້ກ່ຽວຂ້ອງກັບການລົ້ມລົງ ຫຼື ການອ່ອນແອ, ແຕ່ກ່ຽວຂ້ອງກັບການຖືກມືຂອງເຮົາໂຈມຕີໃຫ້ລົ້ມລົງ. “ຄົນທີ່ເຊື່ອ” ໃນ “ສຳລັບຜູ້ທີ່ເຊື່ອ, ສິລານີ້ເປັນພື້ນຖານສຳລັບການກໍ່ສ້າງຂອງພວກເຂົາ” ໝາຍເຖິງຄົນໃຫ້ບໍລິການເຫຼົ່ານີ້ທີ່ຈົງຮັກພັກດີ ແລະ “ພື້ນຖານສຳລັບການກໍ່ສ້າງຂອງພວກເຂົາ” ໝາຍເຖິງພຣະຄຸນ ແລະ ພອນທີ່ພວກເຂົາຈະໄດ້ຮັບ ຫຼັງຈາກທີ່ພວກເຂົາໃຫ້ບໍລິການທີ່ຈົງຮັກພັກດີແກ່ເຮົາ. ການທີ່ລູກຊາຍກົກໄດ້ຮັບການເປັນພະຍານກໍບົ່ງບອກວ່າ ຍຸກເດີມນີ້ທັງປວງຈະຜ່ານໄປໃນອີກບໍ່ດົນ; ນັ້ນກໍຄື ມັນເປັນສັນຍາລັກໃຫ້ກັບຄວາມພິນາດຂອງອານາຈັກຂອງຊາຕານ; ສະນັ້ນ ສຳລັບຊົນຕ່າງຊາດ ມັນຈຶ່ງເປັນສິລາທີ່ບົດພວກເຂົາໃຫ້ແຫຼກຈົນຕາຍ. ສະນັ້ນ ການບົດທຸກຊົນຊາດໃຫ້ເປັນຕ່ອນນ້ອຍໆໝາຍເຖິງການເຮັດໃຫ້ໂລກທັງໝົດກັບຄືນມາໃໝ່ອີກຄັ້ງຢ່າງສົມບູນ; ສິ່ງເດີມໆຈະຜ່ານໄປ

ແລະ ສິ່ງໃໝ່ໆຈະຖືກສ້າງຕັ້ງຂຶ້ນ; ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງຄຳວ່າ “ການປິດ”. ພວກເຈົ້າເຂົ້າໃຈບໍ? ພາລະກິດທີ່ເຮົາເຮັດໃນຂັ້ນຕອນສຸດທ້າຍນີ້ແມ່ນສາມາດສະຫຼຸບໄດ້ດ້ວຍຄຳເວົ້າສອງສາມຄຳເຫຼົ່ານີ້ເທົ່ານັ້ນ. ນີ້ແມ່ນການກະທຳທີ່ອັດສະຈັນຂອງເຮົາ ແລະ ເຈົ້າຄວນເຂົ້າໃຈຄວາມປະສົງຂອງເຮົາທີ່ຢູ່ພາຍໃນພຣະທຳຂອງເຮົາ.

# ບົດທີ 119

ພວກເຈົ້າທຸກຄົນຄວນເຂົ້າໃຈເຈດຕະນາຂອງເຮົາ ແລະ ພວກເຈົ້າທຸກຄົນຄວນຈະເຂົ້າໃຈອາລົມຂອງເຮົາ. ຕອນນີ້ແມ່ນເວລາທີ່ຈະກຽມກັບຄືນສູ່ຊີໂອນ. ເຮົາບໍ່ມີຄວາມຄິດທີ່ຈະເຮັດຫຍັງ ນອກຈາກສິ່ງນີ້. ເຮົາພຽງແຕ່ຫວັງວ່າຈະໄດ້ກັບມາຮ່ວມຢູ່ກັບພວກເຈົ້າໃນມື້ໃດມື້ໜຶ່ງໃນອີກບໍ່ດົນ ແລະ ໃຊ້ທຸກນາທີ ແລະ ທຸກວິນາທີຮ່ວມກັນກັບພວກເຈົ້າໃນຊີໂອນ. ເຮົາກຽດຊັງໂລກ, ເຮົາກຽດຊັງເນື້ອໜັງ ແລະ ຍິ່ງໄປກວ່ານັ້ນ ເຮົາກຽດຊັງມະນຸດທຸກຄົນທີ່ຢູ່ເທິງແຜ່ນດິນໂລກ. ເຮົາບໍ່ເຕັມໃຈທີ່ຈະເຫັນພວກເຂົາເພາະພວກເຂົາທຸກຄົນເປັນຄືກັບມານຮ້າຍ ບໍ່ມີຮ່ອງຮອຍທຳມະຊາດຂອງມະນຸດແມ່ນແຕ່ໜ້ອຍດຽວ. ເຮົາບໍ່ເຕັມໃຈທີ່ຈະດຳລົງຊີວິດເທິງແຜ່ນດິນໂລກ; ເຮົາກຽດຊັງສິ່ງຖືກສ້າງທັງໝົດ, ເຮົາກຽດຊັງທຸກຄົນທີ່ມາຈາກເນື້ອໜັງ ແລະ ເລືອດ. ໂລກທັງປວງເຕັມໄປດ້ວຍຊາກສົບ; ເຮົາຕ້ອງການກັບຄືນສູ່ຊີໂອນທັນທີ, ເພື່ອກຳຈັດກິ່ນຊາກສົບທັງໝົດອອກຈາກແຜ່ນດິນໂລກ ແລະ ເຕີມເຕັມໂລກທັງປວງໄປດ້ວຍສຽງສັນລະເສີນໃຫ້ແກ່ເຮົາ. ເຮົາຈະກັບຄືນສູ່ຊີໂອນ, ເຮົາຈະແຍກຕົວອອກຈາກເນື້ອໜັງ ແລະ ໂລກ ແລະ ບໍ່ມີຜູ້ໃດອາດຂວາງທາງເຮົາໄດ້. ມືຂອງເຮົາທີ່ຂ້າມະນຸດແມ່ນບໍ່ມີຄວາມຮູ້ສຶກ! ຈາກນີ້ເປັນຕົ້ນໄປ ອາດບໍ່ມີຜູ້ໃດເວົ້າເຖິງການສ້າງຄຣິສຕະຈັກ. ຖ້າຜູ້ໃດກໍຕາມເວົ້າ ເຮົາຈະບໍ່ອະໄພໃຫ້ພວກເຂົາ. (ນີ້ກໍຍ້ອນວ່າ ຕອນນີ້ແມ່ນເວລາທີ່ຈະເປັນພະຍານໃຫ້ແກ່ລູກຊາຍກົກຂອງເຮົາ ແລະ ມັນເປັນເວລາທີ່ຈະສ້າງອານາຈັກ; ຜູ້ໃດກໍຕາມທີ່ເວົ້າເຖິງການສ້າງຄຣິສຕະຈັກແມ່ນກຳລັງທຳລາຍການສ້າງອານາຈັກລົງ ແລະ ກໍ່ກວນການຄຸ້ມຄອງຂອງເຮົາ). ທຸກສິ່ງແມ່ນກຽມພ້ອມແລ້ວ, ທຸກສິ່ງໄດ້ຖືກຈັດກຽມແລ້ວ; ສິ່ງດຽວທີ່ຍັງຄົງຢູ່ກໍຄືເພື່ອໃຫ້ລູກຊາຍກົກໄດ້ຮັບການເຊີດຊູ ແລະ ການເປັນພະຍານ. ເມື່ອສິ່ງນັ້ນເກີດຂຶ້ນ ເຮົາຈະກັບຄືນສູ່ຊີໂອນທັນທີ ໂດຍບໍ່ຊັກຊ້າແມ່ນແຕ່ຊ່ວງເວລາດຽວ ແລະ ໂດຍບໍ່ຄຳນຶງເຖິງວ່າຢູ່ໃນຮູບຮ່າງໃດ ເຊິ່ງເປັນບ່ອນທີ່ພວກເຈົ້າມີໃນຄວາມຄິດຂອງພວກເຈົ້າທັງກາງເວັນ ແລະ ກາງຄືນ. ຢ່າພຽງແຕ່ເບິ່ງວ່າ ໂລກໃນປັດຈຸບັນສືບຕໍ່ໄປແນວໃດ, ລາບລື່ນ ແລະ ໝັ້ນຄົງ. ພາລະກິດນີ້ທັງໝົດແມ່ນພາລະກິດຂອງການກັບຄືນສູ່ຊີໂອນ, ສະນັ້ນ ບໍ່ຕ້ອງສົນໃຈສິ່ງເຫຼົ່ານີ້ໃນເວລານີ້; ເມື່ອມື້ແຫ່ງການກັບຄືນສູ່ຊີໂອນມາເຖິງ, ທຸກຄົນກໍຈະຖືກເຮັດໃຫ້ສົມບູນ. ຜູ້ໃດບໍ່ປາຖະໜາທີ່ຈະກັບຄືນສູ່ຊີໂອນໃນໄວໆນີ້? ຜູ້ໃດບໍ່ປາຖະໜາໃຫ້ພຣະບິດາ ແລະ ລູກຊາຍກັບຄືນມາຢູ່ຮ່ວມກັນໃນໄວໆນີ້? ບໍ່ວ່າຄວາມສຸກທາງໂລກຈະສຸກສຳລານສໍ່າໃດກໍຕາມ, ພວກມັນກໍບໍ່ສາມາດຍຶດໝັ້ນກັບເນື້ອໜັງຂອງພວກເຮົາໄດ້; ພວກເຮົາຈະຢູ່ເໜືອເນື້ອໜັງຂອງພວກເຮົາ ແລະ ພ້ອມກັນກັບຄືນສູ່ຊີໂອນ. ຜູ້ໃດກ້າຂັດຂວາງສິ່ງນີ້? ຜູ້ໃດກ້າກໍ່ອຸປະສັກ? ເຮົາຈະບໍ່ໃຫ້ອະໄພພວກເຂົາຢ່າງແນ່ນອນ! ເຮົາຈະກວາດລ້າງສິ່ງກີດຂວາງທັງໝົດໄປ. (ນີ້ຄືເຫດຜົນທີ່ເຮົາເວົ້າວ່າ ເຮົາບໍ່ສາມາດກັບຄືນສູ່ຊີໂອນໄດ້ຢ່າງທັນທີ. ເຮົາກຳລັງປະຕິບັດພາລະກິດແຫ່ງການຊຳລະລ້າງນີ້ ແລະ ໃນຂະນະດຽວກັນເຮົາກໍກຳລັງເປັນພະຍານໃຫ້ແກ່ລູກຊາຍກົກຂອງເຮົາ; ໜ້າທີ່ສອງຢ່າງເຫຼົ່ານີ້ກຳລັງຄືບໜ້າໃນເວລາດຽວກັນ. ເມື່ອພາລະກິດແຫ່ງການຊຳລະລ້າງສຳເລັດ, ມັນກໍຈະເປັນເວລາທີ່ເຮົາຈະເປີດເຜີຍລູກຊາຍກົກ. "ສິ່ງກີດຂວາງ" ແມ່ນຜູ້

ໃຫ້ບໍລິການຈຳນວນຫຼວງຫຼາຍ ເຊິ່ງເປັນເຫດຜົນທີ່ເຮົາເວົ້າວ່າໜ້າທີ່ສອງຢ່າງເຫຼົ່ານີ້ເກີດຂຶ້ນໃນເວລາດຽວກັນ). ເຮົາຈະໃຫ້ລູກຊາຍກົກຂອງເຮົາຍ່າງໄປກັບເຮົາທົ່ວທັງຈັກກະວານ ແລະ ຈົນສຸດປາຍແຜ່ນດິນໂລກ, ຂ້າມພູເຂົາ ແລະ ແມ່ນໍ້າ ແລະ ສິ່ງທັງປວງ; ຜູ້ໃດກ້າຂັດຂວາງສິ່ງນີ້? ຜູ້ໃດກ້າກີດກັນສິ່ງນີ້? ມືຂອງເຮົາບໍ່ໄດ້ປ່ອຍມະນຸດຄົນໃດໄປຢ່າງງ່າຍດາຍ; ຍົກເວັ້ນລູກຊາຍກົກຂອງເຮົາ ເຮົາໂກດແຄ້ນທຸກຄົນ ແລະ ສາບແຊ່ງທຸກຄົນ. ທົ່ວແຜ່ນດິນ ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ໄດ້ຮັບພອນຂອງເຮົາ; ທຸກຄົນພົບກັບການສາບແຊ່ງຂອງເຮົາ. ຕັ້ງແຕ່ການເນລະມິດສ້າງໂລກ, ເຮົາບໍ່ໄດ້ອວຍພອນຜູ້ໃດ; ແມ່ນແຕ່ເມື່ອເຮົາໄດ້ມອບພອນ, ພວກມັນກໍເປັນພຽງຄຳເວົ້າ ບໍ່ແມ່ນຄວາມຈິງຈັກເທື່ອ, ຍ້ອນເຮົາກຽດຊັງຊາຕານທີ່ສຸດ; ເຮົາຈະບໍ່ອວຍພອນມັນຈັກເທື່ອ, ມີແຕ່ຈະລົງໂທດມັນ. ມີແຕ່ໃນທີ່ສຸດຫຼັງຈາກທີ່ເຮົາໄດ້ເອົາຊະນະຊາຕານຢ່າງຄົບຖ້ວນ ແລະ ໄຊຊະນະທີ່ສົມບູນເປັນຂອງເຮົາ, ເຮົາຈຶ່ງຈະມອບພອນທາງດ້ານວັດຖຸໃຫ້ແກ່ຜູ້ໃຫ້ບໍລິການທີ່ຈົ່ງຮັກພັກດີທຸກຄົນ ແລະ ປ່ອຍໃຫ້ພວກເຂົາໄດ້ຮັບຄວາມປິຕິຍິນດີໃນການສັນລະເສີນເຮົາ ຍ້ອນພາລະກິດທັງໝົດຂອງເຮົາຖືກເຮັດໃຫ້ສຳເລັດແລ້ວ.

ແນ່ນອນ ເວລາຂອງເຮົາບໍ່ໄດ້ຢູ່ໄກ. ແຜນການຄຸ້ມຄອງຫົກພັນປີໃກ້ທີ່ຈະສຳເລັດຕໍ່ຕາຂອງພວກເຈົ້າ. (ແນ່ນອນ ມັນຢູ່ຕໍ່ຕາຂອງພວກເຈົ້າ. ມັນບໍ່ແມ່ນການຄາດການບາງຢ່າງ; ພວກເຈົ້າສາມາດເຫັນສິ່ງນີ້ໄດ້ຈາກອາລົມຂອງເຮົາ). ເຮົາຈະເອົາລູກຊາຍກົກຂອງເຮົາກັບຄືນສູ່ຊີໂອນທັນທີ. ບາງຄົນຈະເວົ້າວ່າ “ຖ້າມັນແມ່ນສຳລັບລູກຊາຍກົກເທົ່ານັ້ນ ເປັນຫຍັງມັນຈຶ່ງໃຊ້ເວລາຫົກພັນປີ? ແລ້ວເປັນຫຍັງຫຼາຍຄົນຈຶ່ງຖືກສ້າງຂຶ້ນ?” ເຮົາໄດ້ເວົ້າກ່ອນໜ້ານັ້ນແລ້ວວ່າ ທຸກສິ່ງຂອງເຮົາລໍ້າຄ່າ. ລູກຊາຍກົກຂອງເຮົາຈະບໍ່ຍິ່ງເປັນຫຼາຍກວ່ານັ້ນບໍ? ເຮົາຈະລະດົມທຸກຄົນໃຫ້ຮັບໃຊ້ເຮົາ ແລະ ຍິ່ງໄປກວ່ານັ້ນ ເຮົາຈະເປີດເຜີຍອຳນາດຂອງເຮົາ ເພື່ອໃຫ້ທຸກຄົນສາມາດເຫັນໄດ້ວ່າ ໃນໂລກຈັກກະວານທັງປວງ ບໍ່ມີວັດຖຸແມ່ນແຕ່ສິ່ງດຽວທີ່ບໍ່ໄດ້ຢູ່ໃນມືຂອງພວກເຮົາ, ບໍ່ມີຄົນແມ່ນແຕ່ຄົນດຽວທີ່ບໍ່ໄດ້ຢູ່ໃນການບໍລິການຂອງພວກເຮົາ ແລະ ບໍ່ມີສິ່ງຂອງແມ່ນແຕ່ສິ່ງດຽວທີ່ບໍ່ແມ່ນເພື່ອຄວາມສຳເລັດຂອງພວກເຮົາ. ເຮົາຈະບັນລຸທຸກສິ່ງ. ສຳລັບເຮົາແລ້ວ ບໍ່ມີແນວຄວາມຄິດກ່ຽວກັບເວລາ; ເຖິງແມ່ນເຮົາຕັ້ງໃຈທີ່ຈະເຮັດໃຫ້ແຜນການ ແລະ ພາລະກິດຂອງເຮົາໃນເວລາຫົກພັນປີນັ້ນສຳເລັດ, ສຳລັບເຮົາແລ້ວ ທຸກສິ່ງແມ່ນຖືກປົດປ່ອຍ ແລະ ເປັນອິດສະຫຼະ. ເຖິງແມ່ນວ່າມັນໜ້ອຍກວ່າຫົກພັນປີ, ໃນມຸມມອງຂອງເຮົາ ເວລາໄດ້ມາເຖິງແລ້ວ ຜູ້ໃດຈະກ້າກ່າວຄຳເວົ້າທີ່ຕໍ່ຕ້ານ? ຜູ້ໃດຈະກ້າຢືນຢັດ ແລະ ຕັດສິນຕາມອຳເພີໃຈ? ພາລະກິດຂອງເຮົາ, ເຮົາຈະເຮັດດ້ວຍຕົນເອງ; ເວລາຂອງເຮົາ, ເຮົາຈະຈັດແຈງດ້ວຍຕົນເອງ. ບໍ່ມີຜູ້ໃດ, ບໍ່ມີເລື່ອງໃດ ແລະ ບໍ່ມີສິ່ງໃດກ້າເຮັດຕາມອຳເພີໃຈ; ເຮົາຈະເຮັດໃຫ້ທຸກຄົນຕິດຕາມເຮົາ. ສຳລັບເຮົາແລ້ວ ບໍ່ມີຖືກ ຫຼື ຜິດ; ຖ້າເຮົາເວົ້າວ່າສິ່ງໃດໜຶ່ງຖືກຕ້ອງ, ມັນກໍຖືກຕ້ອງຢ່າງແນ່ນອນ; ຖ້າເຮົາເວົ້າວ່າສິ່ງໃດໜຶ່ງຜິດ ມັນກໍຈະຜິດເຊັ່ນກັນ. ເຈົ້າຕ້ອງບໍ່ວັດແທກເຮົາດ້ວຍແນວຄິດຂອງມະນຸດຢູ່ສະເໝີ! ເຮົາເວົ້າວ່າ ລູກຊາຍກົກ ແລະ ເຮົາໄດ້ຮັບພອນຮ່ວມກັນ, ຜູ້ໃດກ້າປະຕິເສດທີ່ຈະຍອມ? ເຮົາຈະທຳລາຍເຈົ້າທັນທີ! ເຈົ້າປະຕິເສດທີ່ຈະຍອມ! ເຈົ້າກະບົດ! ເຮົາບໍ່ມີຄວາມເມດຕາຕໍ່ມະນຸດຊາດຄົນໃດໜຶ່ງແທ້ໆ ແລະ ຄວາມກຽດຊັງຂອງເຮົາໄດ້ໄປເຖິງຂີດຈຳກັດຂອງມັນແລ້ວ; ເຮົາພຽງແຕ່ບໍ່ສາມາດອົດທົນໄດ້ອີກຕໍ່ໄປ. ເທົ່າທີ່ເຮົາຮູ້ ໂລກຈັກກະວານ

ທັງປວງຕ້ອງຖືກທຳລາຍຖິ້ມທັນທີ, ມີແຕ່ເມື່ອນັ້ນ ພາລະກິດທີ່ຍິ່ງໃຫຍ່ຂອງເຮົາຈຶ່ງຈະບັນລຸ; ມີແຕ່ເມື່ອນັ້ນ ແຜນການຄຸ້ມຄອງຂອງເຮົາຈຶ່ງຈະສຳເລັດ; ແລະ ມີແຕ່ເມື່ອນັ້ນ ຄວາມກຽດຊັງທີ່ຢູ່ໃນຫົວໃຈຂອງເຮົາຈຶ່ງຈະຖືກປັດເປົ່າອອກ. ບັດນີ້ ເຮົາເປັນຫ່ວງແຕ່ການເປັນພະຍານໃຫ້ກັບລູກຊາຍກົກຂອງເຮົາເທົ່ານັ້ນ. ເຮົາຈະປະຖິ້ມເລື່ອງອື່ນໆທັງໝົດ; ເຮົາຈະເຮັດສິ່ງທີ່ສຳຄັນກ່ອນ ແລະ ຫຼັງຈາກນັ້ນ ເຮົາຈຶ່ງຈະເຮັດສິ່ງທີ່ຮອງລົງມາ. ສິ່ງເຫຼົ່ານີ້ແມ່ນບາດກ້າວໃນພາລະກິດຂອງເຮົາ ເຊິ່ງບໍ່ມີຜູ້ໃດຄວນລະເມີດ; ທຸກຄົນຕ້ອງປະຕິບັດຕາມທີ່ເຮົາເວົ້າ ເພື່ອບໍ່ໃຫ້ພວກເຂົາກາຍມາເປັນເປົ້າໝາຍຂອງການສາບແຊ່ງຂອງເຮົາ.

ບັດນີ້ເມື່ອພາລະກິດຂອງເຮົາສຳເລັດລົງ, ເຮົາກໍສາມາດພັກຜ່ອນ. ຈາກນີ້ເປັນຕົ້ນໄປ ເຮົາຈະບໍ່ປະຕິບັດພາລະກິດອີກຕໍ່ໄປ, ແຕ່ຈະສັ່ງໃຫ້ລູກຊາຍກົກຂອງເຮົາເຮັດທຸກສິ່ງທີ່ເຮົາຕ້ອງການເຮັດໃຫ້ສຳເລັດ ເພາະລູກຊາຍກົກຂອງເຮົາກໍເປັນເຮົາ; ລູກຊາຍກົກຂອງເຮົາເປັນຕົວຕົນຂອງເຮົາ. ສິ່ງນີ້ບໍ່ໄດ້ຜິດພາດແມ່ນແຕ່ໜ້ອຍດຽວ; ຢ່າໃຊ້ແນວຄິດເພື່ອຕັດສິນ. ການໄດ້ເຫັນລູກຊາຍກົກກໍຄືການໄດ້ເຫັນເຮົາ ຍ້ອນພວກເຮົາເປັນໜຶ່ງດຽວກັນ ແລະ ເປັນອັນດຽວກັນ. ຜູ້ໃດກໍຕາມທີ່ແຍກພວກເຮົາກໍກຳລັງຕໍ່ຕ້ານເຮົາ ແລະ ເຮົາຈະບໍ່ໃຫ້ອະໄພແກ່ພວກເຂົາ. ໃນພຣະທຳຂອງເຮົາ ມີຄວາມລຶກລັບທີ່ມະນຸດບໍ່ສາມາດເຂົ້າໃຈໄດ້. ມີແຕ່ຄົນທີ່ເຮົາຮັກເທົ່ານັ້ນທີ່ສາມາດສະແດງເຖິງເຮົາ ແລະ ບໍ່ມີຄົນອື່ນອີກ; ສິ່ງນີ້ຖືກເຮົາກຳນົດ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ພຣະທຳຂອງເຮົາອຸດົມສົມບູນ, ຄວບຄຸມ ແລະ ບໍ່ສາມາດຢັ່ງເຖິງ. ທຸກຄົນຄວນເສຍສະຫຼະຄວາມພະຍາຍາມອັນຍິ່ງໃຫຍ່ໃນພຣະທຳຂອງເຮົາ, ພະຍາຍາມໄຕ່ຕອງພຣະທຳເຫຼົ່ານີ້ຢູ່ເລື້ອຍໆ ແລະ ບໍ່ເອົາອອກພຣະທຳແມ່ນແຕ່ຄຳດຽວ ຫຼື ປະໂຫຍກດຽວ, ບໍ່ດັ່ງນັ້ນ ຜູ້ຄົນຈະເຮັດວຽກໜັກພາຍໃຕ້ຄວາມຜິດພາດ ແລະ ພຣະທຳຂອງເຮົາຈະຖືກເຂົ້າໃຈຜິດ. ເຮົາໄດ້ເວົ້າວ່າ ອຸປະນິໄສຂອງເຮົາບໍ່ອົດທົນຕໍ່ການເຮັດຜິດ ເຊິ່ງໝາຍຄວາມວ່າ ລູກຊາຍກົກຂອງເຮົາທີ່ໄດ້ຮັບການເປັນພະຍານແມ່ນບໍ່ສາມາດຖືກຕໍ່ຕ້ານໄດ້. ລູກຊາຍກົກຂອງເຮົາເປັນຕົວແທນໃຫ້ກັບທຸກລັກສະນະໃນອຸປະນິໄສຂອງເຮົາ, ສະນັ້ນ ເມື່ອແກທີ່ສັກສິດດັງຂຶ້ນ, ນັ້ນແມ່ນເວລາທີ່ເຮົາເລີ່ມເປັນພະຍານໃຫ້ກັບລູກຊາຍກົກ ແລະ ດ້ວຍເຫດນັ້ນ ຕໍ່ນີ້ໄປ ແກທີ່ສັກສິດກໍຈະເປັນການປະກາດເຖິງອຸປະນິໄສຂອງເຮົາຕໍ່ມວນຊົນເທື່ອລະໜ້ອຍ. ເວົ້າອີກຢ່າງກໍຄື ເມື່ອລູກຊາຍກົກຖືກເປີດເຜີຍ ນັ້ນກໍຈະເປັນເວລາທີ່ອຸປະນິໄສຂອງເຮົາຖືກເປີດເຜີຍ. ຜູ້ໃດສາມາດຢັ່ງເຖິງສິ່ງນີ້ໄດ້? ເຮົາເວົ້າວ່າ ແມ່ນແຕ່ພາຍໃນຄວາມລຶກລັບທີ່ເຮົາໄດ້ເປີດເຜີຍ ທີ່ນັ້ນກໍຍັງມີຄວາມລຶກລັບທີ່ຜູ້ຄົນບໍ່ສາມາດແກ້ໄຂໄດ້. ຜູ້ໃດທ່າມກາງພວກເຈົ້າທີ່ໄດ້ພະຍາຍາມຄິດອອກເຖິງຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ແທ້ໆ? ອຸປະນິໄສຂອງເຮົາເປັນບຸກຄະລິກຂອງບຸກຄົນໃດໜຶ່ງ ດັ່ງທີ່ພວກເຈົ້າໄດ້ຈິນຕະນາການບໍ? ການຄິດແບບນັ້ນແມ່ນເປັນຂໍ້ຜິດພາດທີ່ຮ້າຍແຮງ! ມື້ນີ້ ຜູ້ໃດກໍຕາມທີ່ເຫັນວ່າລູກຊາຍກົກຂອງເຮົາເປັນເປົ້າໝາຍຂອງພອນ ແລະ ພວກເຂົາໄດ້ເຫັນອຸປະນິໄສຂອງເຮົາ, ສິ່ງນີ້ກໍເປັນຈິງແທ້ໆ. ລູກຊາຍກົກຂອງເຮົາເປັນຕົວແທນໃຫ້ແກ່ທຸກຢ່າງຂອງເຮົາ; ພວກເຂົາເປັນຕົວຕົນຂອງເຮົາ ໂດຍບໍ່ຕ້ອງສົງໄສ. ບໍ່ມີຜູ້ໃດອາດມີຄວາມສົງໄສກ່ຽວກັບສິ່ງນີ້ໄດ້! ຄົນທີ່ເຊື່ອຟັງກໍໄດ້ຮັບພອນດ້ວຍຄວາມກະລຸນາ ແລະ ຄົນທີ່ກະບົດກໍຖືກສາບແຊ່ງ. ນີ້ແມ່ນສິ່ງທີ່ເຮົາສັ່ງການ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້!

# ບົດທີ 120

ພູເຂົາຊີໂອນເອີຍ! ຈົ່ງປິຕິຍິນດີເຖີດ! ພູເຂົາຊີໂອນເອີຍ! ຈົ່ງຮ້ອງເພງອອກມາ! ເຮົາໄດ້ກັບຄືນມາດ້ວຍຄວາມມີໄຊ, ເຮົາໄດ້ກັບຄືນມາດ້ວຍໄຊຊະນະ! ທຸກໆຄົນ! ຈົ່ງຟ້າວລຽນແຖວຢ່າງເປັນລະບຽບ! ສິ່ງຊົງສ້າງທັງໝົດເອີຍ! ຕອນນີ້ຈົ່ງພາກັນຢຸດນິ້ງ ເນື່ອງຈາກຕົວຕົນຂອງເຮົາກຳລັງຜະເຊີນກັບຈັກກະວານທັງໝົດ ແລະ ປາກົດຕົວຢູ່ທິດຕາເວັນອອກຂອງໂລກ! ຜູ້ໃດກ້າທີ່ຈະບໍ່ຄຸເຂົ່າລົງເພື່ອນະມັດສະການ? ຜູ້ໃດກ້າທີ່ຈະບໍ່ເອີ້ນເຮົາວ່າພຣະເຈົ້າທີ່ແທ້ຈິງ? ຜູ້ໃດກ້າທີ່ຈະບໍ່ແນມເບິ່ງດ້ວຍຄວາມເຄົາລົບບູຊາ? ຜູ້ໃດກ້າທີ່ຈະບໍ່ສັນລະເສີນ? ຜູ້ໃດກ້າທີ່ຈະບໍ່ມີຄວາມປິຕິຍິນດີ? ປະຊາຊົນຂອງເຮົາຈະໄດ້ຍິນສຽງຂອງເຮົາ ແລະ ບຸດຊາຍຂອງເຮົາຈະຢູ່ລອດໃນອານາຈັກຂອງເຮົາ! ພູເຂົາ, ແມ່ນໍ້າ ແລະທຸກສິ່ງຈະເຊີດຊູຢ່າງບໍ່ຈົບສິ້ນ ແລະ ໂດດໄປມາຢ່າງບໍ່ຢຸດເຊົາ. ໃນເວລານີ້, ບໍ່ມີຜູ້ໃດກ້າທີ່ຈະຖອຍຫຼັງ ແລະ ບໍ່ມີຜູ້ໃດກ້າທີ່ຈະລຸກຂຶ້ນເພື່ອຕໍ່ຕ້ານ. ນີ້ແມ່ນການກະທຳທີ່ມະຫັດສະຈັນຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນພະລັງທີ່ຍິ່ງໃຫຍ່ຂອງເຮົາ! ເຮົາຈະເຮັດໃຫ້ທຸກສິ່ງເຄົາລົບບູຊາເຮົາໃນໃຈຂອງສິ່ງເຫຼົ່ານັ້ນ ແລະ ຫຼາຍໄປກວ່ານີ້ ແມ່ນເຮົາຈະເຮັດໃຫ້ທຸກສິ່ງສັນລະເສີນເຮົາ! ນີ້ແມ່ນເປົ້າໝາຍສູງສຸດຂອງແຜນການຄຸ້ມຄອງຫົກພັນປີຂອງເຮົາ ແລະ ມັນແມ່ນສິ່ງທີ່ເຮົາໄດ້ບັນຍັດໄວ້. ຈະບໍ່ມີຄົນໃດ ຫຼື ວັດຖຸໃດ ຫຼື ເຫດການໃດທີ່ຈະກ້າລຸກຂຶ້ນເພື່ອຂັດຂືນເຮົາ ຫຼື ຕໍ່ຕ້ານເຮົາ. ປະຊາຊົນທັງໝົດຂອງເຮົາຈະຫລັ່ງໄຫຼໄປພູເຂົາຂອງເຮົາ (ເວົ້າອີກແບບໜຶ່ງກໍຄື ໂລກທີ່ເຮົາຈະສ້າງຂຶ້ນພາຍຫຼັງ) ແລະ ພວກເຂົາຈະອ່ອນນ້ອມຕໍ່ໜ້າເຮົາ ຍ້ອນເຮົາມີຄວາມສະຫງ່າ ແລະ ມີການພິພາກສາ ແລະ ເຮົາຖືສິດອຳນາດ. (ນີ້ໝາຍເຖິງເວລາທີ່ເຮົາຢູ່ໃນຮ່າງກາຍ. ເຮົາຍັງມີສິດອຳນາດໃນເນື້ອໜັງ ແຕ່ຍ້ອນຂໍ້ຈຳກັດຂອງເວລາ ແລະ ສະຖານທີ່ບໍ່ສາມາດຢູ່ເໜືອເນື້ອໜັງໄດ້ ຈຶ່ງບໍ່ສາມາດເວົ້າໄດ້ວ່າ ເຮົາໄດ້ຮັບຄວາມສະຫງ່າລາສີຢ່າງສົມບູນ. ເຖິງເຮົາຈະໄດ້ຮັບບຸດຊາຍກົກໃນເນື້ອໜັງ ແຕ່ກໍບໍ່ສາມາດເວົ້າໄດ້ວ່າ ເຮົາໄດ້ຮັບຄວາມສະຫງ່າລາສີ. ເມື່ອເຮົາໄດ້ກັບຄືນໄປພູເຂົາຊີໂອນ ແລະ ປ່ຽນແປງການປາກົດຕົວຂອງເຮົາເທົ່ານັ້ນຈຶ່ງອາດເວົ້າໄດ້ວ່າ ເຮົາໄດ້ຖືສິດອຳນາດ ເຊິ່ງນັ້ນກໍຄື ເຮົາໄດ້ຮັບຄວາມສະຫງ່າລາສີ). ບໍ່ມີສິ່ງໃດທີ່ຈະຍາກສຳລັບເຮົາ. ທຸກສິ່ງຈະຖືກທຳລາຍດ້ວຍພຣະທຳຈາກປາກຂອງເຮົາ ແລະ ທຸກສິ່ງຈະມີຊີວິດ ແລະຖືກເຮັດໃຫ້ສົມບູນດ້ວຍພຣະທຳຈາກປາກຂອງເຮົາ. ສິ່ງດັ່ງກ່າວແມ່ນພະລັງທີ່ຍິ່ງໃຫຍ່ຂອງເຮົາ ແລະສິ່ງດັ່ງກ່າວແມ່ນສິດອຳນາດຂອງເຮົາ. ຍ້ອນເຮົາເຕັມໄປດ້ວຍພະລັງ ແລະ ອຸດົມສົມບູນໄປດ້ວຍສິດອຳນາດ ເຊິ່ງບໍ່ມີຜູ້ໃດກ້າທີ່ຈະຂັດຂວາງເຮົາ. ເຮົາໄດ້ມີໄຊເໜືອທຸກສິ່ງແລ້ວ ແລະ ເຮົາໄດ້ເອົາຊະນະບຸດຊາຍແຫ່ງການກະບົດທຸກຄົນແລ້ວ. ເຮົາກຳລັງນຳເອົາບຸດຊາຍກົກຂອງເຮົາກັບຄືນສູ່ພູເຂົາຊີໂອນພ້ອມກັບເຮົາ. ເຮົາບໍ່ໄດ້ກັບໄປພູເຂົາຊີໂອນຜູ້ດຽວ. ສະນັ້ນ, ທຸກຄົນຈະເຫັນບຸດຊາຍກົກຂອງເຮົາ ແລະ ດ້ວຍເຫດນັ້ນ ກໍຈະມີໃຈເຄົາລົບບູຊາເຮົາ. ນີ້ແມ່ນເປົ້າໝາຍຂອງເຮົາໃນການຮັບເອົາບຸດຊາຍກົກ ແລະ ນີ້ແມ່ນແຜນການຂອງເຮົານັບແຕ່ການຊົງສ້າງໂລກ.

ເມື່ອທຸກຢ່າງພ້ອມແລ້ວ, ນັ້ນກໍຈະແມ່ນມື້ທີ່ເຮົາກັບຄືນສູ່ພູເຂົາຊີໂອນ ແລະ ມື້ນີ້ຈະເປັນມື້ທີ່ທຸກ

ຄົນລະລຶກເຖິງ. ເມື່ອເຮົາກັບຄືນພູເຂົາຊີໂອນ, ທຸກສິ່ງຢູ່ເທິງແຜ່ນດິນໂລກຈະມີດງຽບ ແລະ ທຸກສິ່ງຢູ່ເທິງແຜ່ນດິນໂລກຈະຢູ່ໃນຄວາມສະຫງົບ. ເມື່ອເຮົາກັບຄືນພູເຂົາຊີໂອນ, ທຸກສິ່ງຈະກັບໄປມີຮູບຮ່າງດັ່ງເດີມຂອງພວກມັນ. ເມື່ອນັ້ນ ເຮົາຈະເລີ່ມພາລະກິດຂອງເຮົາໃນພູເຂົາຊີໂອນ. ເຮົາຈະລົງໂທດຄົນຊົ່ວ ແລະ ໃຫ້ລາງວັນແກ່ຄົນດີ ແລະ ເຮົາຈະບັງຄັບໃຊ້ຄວາມຊອບທຳຂອງເຮົາ ແລະ ເຮົາຈະປະຕິບັດການພິພາກສາຂອງເຮົາ. ເຮົາຈະໃຊ້ພຣະທຳຂອງເຮົາເພື່ອເຮັດໃຫ້ທຸກຢ່າງສຳເລັດ, ເຮັດໃຫ້ທຸກຄົນ ແລະ ທຸກສິ່ງປະສົບກັບມືທີ່ຂ້ຽນຕີຂອງເຮົາ ແລະ ເຮົາຈະເຮັດໃຫ້ທຸກຄົນເຫັນຄວາມສະຫງ່າລາສີທີ່ສົມບູນຂອງເຮົາ, ສະຕິປັນຍາທີ່ສົມບູນຂອງເຮົາ ແລະ ຄວາມໃຈບຸນທີ່ສົມບູນຂອງເຮົາ. ຈະບໍ່ມີຜູ້ໃດກ້າລຸກຂຶ້ນໃນການພິພາກສາ ເນື່ອງຈາກວ່າ ໃນຕົວເຮົາ ທຸກສິ່ງແມ່ນຖືກເຮັດໃຫ້ສຳເລັດ; ແລະ ຢູ່ບ່ອນນີ້ ຈົ່ງໃຫ້ມະນຸດທຸກຄົນເຫັນກຽດທີ່ສົມບູນຂອງເຮົາ ແລະ ຊິມລົດຊາດແຫ່ງໄຊຊະນະທີ່ສົມບູນຂອງເຮົາ ເນື່ອງຈາກວ່າ ທຸກສິ່ງຖືກສະແດງອອກໃນຕົວເຮົາ. ຈາກສິ່ງນີ້, ມັນກໍເປັນໄປໄດ້ທີ່ຈະເຫັນພະລັງທີ່ຍິ່ງໃຫຍ່ຂອງເຮົາ ແລະ ສິດອຳນາດຂອງເຮົາ. ຈະບໍ່ມີຜູ້ໃດກ້າລ່ວງເກີນເຮົາ ແລະ ຈະບໍ່ມີຜູ້ໃດກ້າຂັດຂວາງເຮົາ. ທຸກສິ່ງຖືກເຮັດໃຫ້ເປີດອອກໃນຕົວເຮົາ. ແມ່ນໃຜກ້າທີ່ຈະເຊື່ອງສິ່ງໃດສິ່ງໜຶ່ງ? ເຮົາຈະບໍ່ສະແດງຄວາມເມດຕາໃຫ້ແກ່ຜູ້ນັ້ນຢ່າງແນ່ນອນ! ຄົນຊົ່ວເຊັ່ນນີ້ຕ້ອງໄດ້ຮັບການລົງໂທດທີ່ຮຸນແຮງຈາກເຮົາ ແລະ ຄົນຊັ້ນຕໍ່າເຊັ່ນນີ້ຕ້ອງຖືກກວາດລ້າງຈາກສາຍຕາຂອງເຮົາ. ເຮົາຈະປົກຄອງພວກເຂົາດ້ວຍທ່ອນເຫຼັກ ແລະ ເຮົາຈະໃຊ້ສິດອຳນາດຂອງເຮົາເພື່ອພິພາກສາພວກເຂົາ ໂດຍບໍ່ມີຄວາມເມດຕາແມ່ນແຕ່ໜ້ອຍ ແລະ ບໍ່ລະເວັ້ນຄວາມຮູ້ສຶກຂອງພວກເຂົາເລີຍ ເນື່ອງຈາກວ່າ ເຮົາຄືພຣະເຈົ້າ ຜູ້ທີ່ບໍ່ມີອາລົມ ແລະ ສະຫງ່າຜ່າເຜີຍ ແລະ ທີ່ບໍ່ສາມາດຖືກລ່ວງເກີນໄດ້. ທຸກຄົນຄວນເຂົ້າໃຈ ແລະ ເຫັນສິ່ງນີ້ ເພື່ອບໍ່ໃຫ້ພວກເຂົາຖືກເຮົາໂຈມຕີ ແລະ ກຳຈັດ "ໂດຍບໍ່ມີສາເຫດ ຫຼື ເຫດຜົນ" ເນື່ອງຈາກວ່າ ທ່ອນເຫຼັກຂອງເຮົາຈະໂຈມຕີທຸກຄົນທີ່ລ່ວງເກີນເຮົາ. ເຮົາບໍ່ສົນໃຈວ່າພວກເຂົາຈະຮູ້ຈັກພຣະດຳລັດແຫ່ງການປົກຄອງຂອງເຮົາ ຫຼື ບໍ່; ສິ່ງນັ້ນຈະບໍ່ມີຜົນຫຍັງຕໍ່ເຮົາ ໃນເມື່ອຕົວຕົນຂອງເຮົາບໍ່ອົດທົນຕໍ່ການຖືກລ່ວງເກີນໂດຍຄົນໃດໜຶ່ງ. ນີ້ແມ່ນເຫດຜົນທີ່ວ່າ ເປັນຫຍັງຈຶ່ງມີການເວົ້າວ່າ ເຮົາແມ່ນສິງໂຕ; ເຮົາໂຈມຕີຜູ້ໃດກໍຕາມທີ່ເຮົາຈັບຕ້ອງ. ນັ້ນແມ່ນເຫດຜົນທີ່ມີການເວົ້າວ່າ ໃນຕອນນີ້ ມັນກໍຄືການໝິ່ນປະໝາດ ທີ່ຈະເວົ້າວ່າເຮົາແມ່ນພຣະເຈົ້າແຫ່ງຄວາມເຫັນໃຈ ແລະ ຄວາມເມດຕາ. ໂດຍແກ່ນແທ້ແລ້ວ, ເຮົາບໍ່ແມ່ນລູກແກະ ແຕ່ພັດແມ່ນສິງໂຕ. ບໍ່ມີຜູ້ໃດກ້າລ່ວງເກີນເຮົາ; ໃຜກໍຕາມທີ່ລ່ວງເກີນເຮົາ, ເຮົາຈະລົງໂທດດ້ວຍຄວາມຕາຍ ຢ່າງທັນທີ ແລະ ໂດຍທີ່ບໍ່ມີຄວາມເມດຕາ. ສິ່ງນີ້ພຽງພໍທີ່ຈະສະແດງໃຫ້ເຫັນເຖິງອຸປະນິໄສຂອງເຮົາ. ສະນັ້ນ, ໃນຍຸກສຸດທ້າຍ ກຸ່ມຄົນຂະໜາດໃຫຍ່ຈະຖອຍໂຕ ແລະ ນີ້ກໍຈະຍາກທີ່ຜູ້ຄົນຈະທົນໄດ້ ແຕ່ໃນສ່ວນຂອງເຮົາແລ້ວ ເຮົາຈະຜ່ອນຄາຍ ແລະ ມີຄວາມສຸກ ແລະ ເຮົາບໍ່ເຫັນສິ່ງນີ້ເປັນໜ້າວຽກທີ່ຍາກເລີຍ. ສິ່ງດັ່ງກ່າວແມ່ນອຸປະນິໄສຂອງເຮົາ.

ເຮົາຫວັງວ່າ ທຸກຄົນຈະມີຫົວໃຈທີ່ອ່ອນນ້ອມ ເພື່ອເຊື່ອຟັງທຸກສິ່ງທີ່ເປັນຂອງເຮົາ; ຖ້າພວກເຂົາເຮັດເຊັ່ນນັ້ນ, ເຮົາຈະໃຫ້ພອນແກ່ມະນຸດຊາດຢ່າງຫຼວງຫຼາຍຢ່າງແນ່ນອນ ເນື່ອງຈາກວ່າ ດັ່ງທີ່ເຮົາໄດ້

ກ່າວໄວ້ ຜູ້ທີ່ເຂົ້າກັບເຮົາໄດ້ຈະຖືກສະຫງວນໄວ້ ໃນຂະນະທີ່ຜູ້ທີ່ເປັນສັດຕູກັບເຮົາຈະຖືກສາບແຊ່ງ. ເຮົາໄດ້ບັນຍັດສິ່ງນີ້ ແລະ ບໍ່ມີໃຜສາມາດປ່ຽນແປງມັນໄດ້. ສິ່ງທີ່ເຮົາໄດ້ກຳນົດແມ່ນສິ່ງທີ່ເຮົາໄດ້ເຮັດສຳເລັດ ແລະ ໃຜກໍຕາມທີ່ຕໍ່ຕ້ານສິ່ງເຫຼົ່ານັ້ນຈະຖືກຂ້ຽນຕີທັນທີ. ເຮົາມີທຸກສິ່ງທີ່ເຮົາຕ້ອງການໃນພູເຂົາຊີໂອນ ແລະ ທຸກສິ່ງທີ່ເຮົາປາດຖະໜາ. ບໍ່ມີໂລກແມ່ນແຕ່ໜ້ອຍໃນພູເຂົາຊີໂອນ ແລະ ເມື່ອປຽບທຽບກັບໂລກແລ້ວ ມັນແມ່ນພະລາຊະວັງ, ອຸດົມສົມບູນ ແລະ ຫຼູຫຼາ; ແຕ່ກໍບໍ່ມີຜູ້ໃດເຄີຍເຂົ້າໄປໃນພູເຂົາຊີໂອນ ແລະ ດ້ວຍເຫດນັ້ນ ໃນຄວາມຄິດຂອງມະນຸດ ພູເຂົາຊີໂອນຈຶ່ງບໍ່ມີຢູ່ຈິງ. ຊີວິດໃນພູເຂົາຊີໂອນແມ່ນບໍ່ຄືກັນກັບຊີວິດຢູ່ເທິງແຜ່ນດິນໂລກ; ຢູ່ເທິງແຜ່ນດິນໂລກ, ຊີວິດແມ່ນການກິນ, ການແຕ່ງກາຍ, ການຫຼິ້ນ ແລະ ການສະແຫວງຫາຄວາມສຸກ ໃນຂະນະທີ່ໃນພູເຂົາຊີໂອນນັ້ນແມ່ນມີຄວາມແຕກຕ່າງກັນຫຼາຍ. ມັນແມ່ນຊີວິດຂອງພຣະບິດາ ແລະ ບຸດຊາຍທີ່ຢູ່ໃນຄວາມສຸກ ເຊິ່ງເຕີມເຕັມທຸກພື້ນທີ່ຂອງຈັກກະວານ ແຕ່ກໍຍັງມາຮ່ວມກັນຢ່າງພ້ອມພຽງສະເໝີ. ເມື່ອມັນໄດ້ມາຮອດສິ່ງນີ້ໃນເວລານີ້, ເຮົາຈະບອກພວກເຈົ້າວ່າ ພູເຂົາຊີໂອນຕັ້ງຢູ່ບ່ອນໃດ. ພູເຂົາຊີໂອນແມ່ນບ່ອນທີ່ເຮົາພັກອາໄສ; ມັນແມ່ນທີ່ຕັ້ງຂອງຕົວຕົນຂອງເຮົາ. ດັ່ງນັ້ນ, ພູເຂົາຊີໂອນຕ້ອງເປັນສະຖານທີ່ສັກສິດ ແລະ ມັນຕ້ອງຢູ່ໄກຈາກແຜ່ນດິນໂລກ. ນັ້ນແມ່ນເຫດຜົນທີ່ເຮົາກ່າວວ່າ ເຮົາກຽດຊັງຜູ້ຄົນ, ສິ່ງຕ່າງໆ ແລະ ວັດຖຸຕ່າງໆຂອງແຜ່ນດິນໂລກ ແລະ ເຮົາກຽດຊັງການກິນ, ການດື່ມ, ການຫຼິ້ນ ແລະ ການສະແຫວງຫາຄວາມສຸກຂອງເນື້ອໜັງ ຍ້ອນວ່າ ບໍ່ວ່າຄວາມສຸກທາງໂລກຈະເປັນຕາມ່ວນຊື່ນຫຼາຍສໍ່າໃດກໍຕາມ, ສິ່ງເຫຼົ່ານັ້ນກໍບໍ່ສາມາດປຽບທຽບໄດ້ກັບຊີວິດໃນພູເຂົາຊີໂອນໄດ້; ມັນແມ່ນຄວາມແຕກຕ່າງລະຫວ່າງສະຫວັນ ແລະ ແຜ່ນດິນໂລກ ແລະ ບໍ່ມີທາງທີ່ຈະປຽບທັງສອງໄດ້. ເຫດຜົນທີ່ມີປິດສະໜາຫຼາຍຢູ່ເທິງແຜ່ນດິນໂລກ ທີ່ມະນຸດບໍ່ສາມາດແກ້ໄດ້ກໍຄື ຜູ້ຄົນບໍ່ໄດ້ຍິນຫຍັງກ່ຽວກັບພູເຂົາຊີໂອນເລີຍ. ແລ້ວພູເຂົາຊີໂອນຢູ່ບ່ອນໃດກັນແທ້? ມັນຢູ່ດາວເຄາະດວງອື່ນຕາມທີ່ຜູ້ຄົນຈິນຕະນາການບໍ? ບໍ່! ນັ້ນເປັນພຽງຄວາມເພີ້ຝັນໃນຈິດໃຈຂອງມະນຸດ. ມະນຸດຖືວ່າ ສະຫວັນຊັ້ນສາມ ທີ່ເຮົາໄດ້ກ່າວເຖິງວ່າ ມີຄວາມໝາຍທີ່ສະແດງເປັນຮູບຮ່າງກ່ອນແລ້ວ ແຕ່ສິ່ງທີ່ມະນຸດເຂົ້າໃຈໃນແນວຄວາມຄິດຂອງເຂົາແມ່ນກົງກັນຂ້າມກັບຄວາມໝາຍຂອງເຮົາຢ່າງແນ່ນອນ. ສະຫວັນຊັ້ນສາມທີ່ຖືກກ່າວເຖິງຢູ່ບ່ອນນີ້ແມ່ນບໍ່ໄດ້ຜິດແມ່ນແຕ່ໜ້ອຍ. ນັ້ນແມ່ນເຫດຜົນທີ່ເຮົາກ່າວວ່າ ເຮົາຈະບໍ່ທຳລາຍດວງຕາເວັນ, ດວງເດືອນ, ດວງດາວ ແລະ ວັດຖຸທີ່ຢູ່ໃນທ້ອງຟ້າ ແລະ ເຮົາຈະບໍ່ກຳຈັດສະຫວັນ ແລະ ແຜ່ນດິນໂລກ. ເຮົາຈະສາມາດທຳລາຍບ່ອນພັກອາໄສຂອງເຮົາໄດ້ບໍ? ເຮົາຈະສາມາດກຳຈັດພູເຂົາຊີໂອນໄດ້ບໍ? ສິ່ງນີ້ບໍ່ເປັນຕາຫົວບໍ? ສະຫວັນຊັ້ນສາມແມ່ນບ່ອນພັກອາໄສຂອງເຮົາ; ມັນແມ່ນພູເຂົາຊີໂອນ ແລະ ນີ້ຄືສິ່ງທີ່ແນ່ນອນ. (ເປັນຫຍັງເຮົາຈຶ່ງກ່າວວ່າ ມັນຄືສິ່ງທີ່ແນ່ນອນ? ນັ້ນກໍຍ້ອນວ່າ ມະນຸດບໍ່ສາມາດເຂົ້າໃຈໃນສິ່ງທີ່ເຮົາກ່າວ; ເຂົາສາມາດໄດ້ຍິນສິ່ງທີ່ເຮົາກ່າວເທົ່ານັ້ນ. ຂອບເຂດຄວາມຄິດຂອງມະນຸດແມ່ນບໍ່ສາມາດປະກອບມີສິ່ງນີ້ແທ້ໆ ແລະ ດ້ວຍເຫດນັ້ນ ຕອນນີ້ ເຮົາຈະບໍ່ກ່າວເຖິງພູເຂົາຊີໂອນອີກ ເພື່ອໃຫ້ຜູ້ຄົນຖືວ່າ ມັນແມ່ນເລື່ອງທີ່ຖືກແຕ່ງຂຶ້ນ).

ຫຼັງຈາກທີ່ເຮົາກັບຄືນໄປພູເຂົາຊີໂອນ, ຜູ້ທີ່ຢູ່ເທິງແຜ່ນດິນໂລກຈະສືບຕໍ່ສັນລະເສີນເຮົາດັ່ງໃນ

ອະດີດ. ຜູ້ເຮັດການບໍລິການທີ່ຈົງຮັກພັກດີເຫຼົ່ານັ້ນຈະລໍຖ້າຢ່າງທີ່ເຄີຍ ເພື່ອໃຫ້ບໍລິການແກ່ເຮົາ ແຕ່ໜ້າທີ່ຂອງພວກເຂົາກໍຈະຈົບລົງແລ້ວ. ດີທີ່ສຸດທີ່ພວກເຂົາສາມາດເຮັດໄດ້ແມ່ນການພິຈາລະນາ ສະຖານະການແຫ່ງການປາກົດຕົວຂອງເຮົາຢູ່ເທິງແຜ່ນດິນໂລກ. ໃນເວລານັ້ນ, ເຮົາຈະເລີ່ມນໍາເອົາ ຄວາມຈິບຫາຍມາສູ່ຜູ້ທີ່ຈະທົນທຸກກັບໄພພິບັດ; ແຕ່ທຸກຄົນເຊື່ອວ່າ ເຮົາເປັນພຣະເຈົ້າທີ່ຊອບທໍາ. ເຮົາຈະບໍ່ລົງໂທດຜູ້ເຮັດການບໍລິການທີ່ຈົງຮັກພັກດີເຫຼົ່ານັ້ນຢ່າງແນ່ນອນ ແຕ່ຈະປ່ອຍໃຫ້ພວກເຂົາໄດ້ ຮັບພຣະຄຸນຂອງເຮົາເທົ່ານັ້ນ. ເນື່ອງຈາກເຮົາໄດ້ກ່າວໄວ້ວ່າ ເຮົາຈະລົງໂທດຜູ້ທີ່ເຮັດຊົ່ວ ແລະ ຜູ້ທີ່ ກະທໍາດີຈະໄດ້ຮັບຄວາມສຸກທາງດ້ານວັດຖຸທີ່ເຮົາປະທານໃຫ້ ເຊິ່ງສະແດງໃຫ້ເຫັນວ່າ ເຮົາເອງແມ່ນ ພຣະເຈົ້າແຫ່ງຄວາມຊອບທໍາ ແລະ ຄວາມຊື່ສັດ. ເມື່ອເຮົາກັບຄືນສູ່ພູເຂົາຊີໂອນ, ເຮົາຈະເລີ່ມຫັນໄປ ຫາແຕ່ລະຊາດໃນໂລກ; ເຮົາຈະນໍາເອົາຊາວອິດສະຣາເອນໄປສູ່ຄວາມລອດພົ້ນ ແລະ ຂ້ຽນຕີຊາວ ເອຢິບ. ນີ້ແມ່ນຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ. ແລ້ວພາລະກິດຂອງເຮົາຈະບໍ່ເປັນຄືກັນກັບ ພາລະກິດໃນປັດຈຸບັນ: ມັນຈະບໍ່ເປັນພາລະກິດໃນເນື້ອໜັງ ແຕ່ຈະຢູ່ເໜືອເນື້ອໜັງຢ່າງສິ້ນເຊີງ ແລະ ດັ່ງທີ່ເຮົາໄດ້ກ່າວໄວ້ ມັນກໍຈະຖືກກະທໍາ; ແລະ ດັ່ງທີ່ເຮົາໄດ້ສັ່ງການໄວ້ ມັນກໍຈະຄົງຢູ່. ສິ່ງໃດກໍຕາມ ທີ່ຖືກກ່າວ, ຕາບເທົ່າທີ່ມັນຖືກກ່າວຈາກປາກຂອງເຮົາ, ມັນກໍຈະຖືກບັນລຸທັນທີໃນຄວາມເປັນຈິງ; ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງພຣະທໍາຂອງເຮົາທີ່ຖືກກ່າວ ແລະ ການບັນລຸຜົນຂອງມັນກໍຈະ ເກີດຂຶ້ນໃນເວລາດຽວກັນ ເນື່ອງຈາກພຣະທໍາຂອງເຮົາເອງແມ່ນສິດອໍານາດ. ດຽວນີ້ເຮົາກໍາລັງກ່າວ ກ່ຽວກັບສິ່ງທົ່ວໄປບາງຢ່າງ ເພື່ອເປັນວິທີບອກໃບ້ໜ້ອຍໜຶ່ງໃຫ້ແກ່ຜູ້ຄົນຢູ່ເທິງແຜ່ນດິນໂລກ ເພື່ອວ່າ ພວກເຂົາຈະບໍ່ເຂົ້າໃຈໄປໃນທາງຕ່າງໆຫຼາຍ. ເມື່ອເວລານັ້ນມາເຖິງ, ເຮົາຈະຈັດກຽມທຸກຢ່າງ ແລະ ບໍ່ມີຜູ້ໃດຄວນກະທໍາການໂດຍເຈດຕະນາ ເພື່ອພວກເຂົາຈະບໍ່ຖືກມືຂອງເຮົາໂຈມຕີ. ໃນຄວາມນຶກຄິດ ຂອງມະນຸດ, ທຸກສິ່ງທີ່ເຮົາກ່າວເຖິງແມ່ນເລື່ອນລອຍ ເພາະເຖິງຢ່າງນັ້ນ ວິທີການຄິດຂອງມະນຸດແມ່ນ ຈໍາກັດ ແລະ ຄວາມຄິດຂອງມະນຸດແມ່ນໄກຈາກສິ່ງທີ່ເຮົາໄດ້ກ່າວເຖິງ ຄືກັບແຜ່ນດິນໂລກທີ່ໄກຈາກ ສະຫວັນ. ດັ່ງນັ້ນ, ບໍ່ມີຜູ້ໃດສາມາດເຂົ້າໃຈເຖິງສິ່ງນີ້. ສິ່ງດຽວທີ່ຕ້ອງເຮັດແມ່ນໃຫ້ມາຢູ່ໃນແນວທາງ ດຽວກັນກັບສິ່ງທີ່ເຮົາກ່າວ; ນີ້ແມ່ນແນວທາງໃນການປະຕິບັດສິ່ງຕ່າງໆທີ່ຫຼີກຫຼ່ຽງບໍ່ໄດ້. ເຮົາໄດ້ ກ່າວວ່າ: “ໃນຍຸກສຸດທ້າຍ, ສັດຮ້າຍຈະໂຜ່ອອກມາເພື່ອຂົ່ມເຫັງປະຊາຊົນຂອງເຮົາ ແລະ ຜູ້ທີ່ຢ້ານ ຄວາມຕາຍຈະຖືກໝາຍໄວ້ດ້ວຍຕາປະທັບເພື່ອຈະຖືກສັດຮ້າຍນັ້ນຫາມໄປ. ຜູ້ທີ່ໄດ້ເຫັນເຮົາຈະຖືກ ສັດຮ້າຍຂ້າ”. “ສັດຮ້າຍ” ໃນພຣະທໍາເຫຼົ່ານີ້ໝາຍເຖິງຊາຕານ ເຊິ່ງແມ່ນຜູ້ຫຼອກລວງມະນຸດຊາດຢ່າງບໍ່ ຕ້ອງສົງໄສ. ນັ້ນໝາຍຄວາມວ່າ ເມື່ອເຮົາກັບຄືນສູ່ພູເຂົາຊີໂອນ, ຜູ້ເຮັດການບໍລິການກຸ່ມໃຫຍ່ກໍຈະ ຖອນໂຕ; ນັ້ນກໍຄື ພວກເຂົາຈະຖືກສັດຮ້າຍຫາມໄປ. ສັບພະສິ່ງເຫຼົ່ານີ້ທັງໝົດຈະໄປທີ່ຂຸມເລິກເພື່ອຮັບ ການຂ້ຽນຕີຕະຫຼອດການຂອງເຮົາ. “ຜູ້ທີ່ໄດ້ເຫັນເຮົາ” ໝາຍເຖິງຜູ້ເຮັດການບໍລິການທີ່ຈົງຮັກພັກດີທີ່ ເຮົາໄດ້ເອົາຊະນະ. ການ “ໄດ້ເຫັນເຮົາ” ໝາຍເຖິງການທີ່ພວກເຂົາຖືກເຮົາເອົາຊະນະ. ການ “ຖືກ ສັດຮ້າຍຂ້າ” ໝາຍເຖິງຊາຕານ, ການຖືກເຮົາເອົາຊະນະ ແລະ ການບໍ່ກ້າທີ່ຈະລຸກຂຶ້ນເພື່ອຕໍ່ຕ້ານເຮົາ. ເວົ້າອີກແບບໜຶ່ງກໍຄື ຊາຕານຈະບໍ່ກ້າເຮັດວຽກງານໃດໜຶ່ງກັບຜູ້ເຮັດການບໍລິການເຫຼົ່ານີ້ ແລະ ດ້ວຍ

ເຫດນັ້ນ ວິນຍານຂອງຜູ້ຄົນເຫຼົ່ານີ້ຈະຖືກຊ່ວຍໃຫ້ລອດພົ້ນ; ສິ່ງນີ້ຖືກກ່າວຂຶ້ນກໍເນື່ອງຈາກຄວາມສາມາດຂອງພວກເຂົາໃນການຈົງຮັກພັກດີຕໍ່ເຮົາ ແລະ ມັນໝາຍຄວາມວ່າ ຜູ້ເຮັດການບໍລິການທີ່ຈົງຮັກພັກດີເຫຼົ່ານັ້ນຈະສາມາດໄດ້ຮັບພຣະຄຸນຂອງເຮົາ ແລະ ພອນຂອງເຮົາ. ດັ່ງນັ້ນ, ເຮົາຈຶ່ງກ່າວວ່າ ວິນຍານຂອງພວກເຂົາຈະຖືກຊ່ວຍໃຫ້ລອດພົ້ນ. (ສິ່ງນີ້ບໍ່ໄດ້ໝາຍເຖິງການຂຶ້ນສະຫວັນຊັ້ນສາມ ເຊິ່ງແມ່ນແນວຄວາມຄິດຂອງມະນຸດເທົ່ານັ້ນ). ແຕ່ຜູ້ຮັບໃຊ້ທີ່ຊົ່ວຮ້າຍເຫຼົ່ານັ້ນຈະຖືກຊາຕານຜູກມັດອີກຄັ້ງ ແລະ ຫຼັງຈາກນັ້ນ ກໍຈະຖືກໂຍນລົງຂຸມເລິກ. ນີ້ແມ່ນການລົງໂທດຂອງເຮົາທີ່ມີຕໍ່ພວກເຂົາ; ນີ້ແມ່ນຜົນກຳສະໜອງຂອງພວກເຂົາ ແລະ ມັນແມ່ນລາງວັນສຳລັບບາບຂອງພວກເຂົາ.

ຂະນະທີ່ບາດກ້າວຂອງພາລະກິດຂອງເຮົາໄວຂຶ້ນ, ເວລາຂອງເຮົາຢູ່ເທິງແຜ່ນດິນໂລກກໍໜ້ອຍລົງເທື່ອລະໜ້ອຍ. ມື້ຂອງການກັບຄືນສູ່ພູເຂົາຊີໂອນຂອງເຮົາໃກ້ເຂົ້າມາແລ້ວ. ເມື່ອພາລະກິດຂອງເຮົາຢູ່ເທິງແຜ່ນດິນໂລກສິ້ນສຸດລົງ, ມັນກໍຈະເປັນເວລາສຳລັບການກັບຄືນສູ່ພູເຂົາຊີໂອນຂອງເຮົາ. ເຮົາບໍ່ປາດຖະໜາທີ່ຈະດຳລົງຊີວິດຢູ່ເທິງແຜ່ນດິນໂລກເລີຍ ແຕ່ເພື່ອການຄຸ້ມຄອງຂອງເຮົາ ແລະ ເພື່ອແຜນການຂອງເຮົາ, ເຮົາຈຶ່ງໄດ້ອົດທົນຕໍ່ຄວາມທຸກທັງໝົດ. ໃນປັດຈຸບັນ, ເວລາໄດ້ມາຮອດແລ້ວ. ເຮົາຈະເຮັດໃຫ້ບາດກ້າວຂອງເຮົາໄວຂຶ້ນ ແລະ ຈະບໍ່ມີຜູ້ໃດສາມາດນຳເຮົາທັນ. ບໍ່ວ່າມະນຸດຈະສາມາດເຂົ້າໃຈມັນ ຫຼື ບໍ່ກໍຕາມ, ເຮົາຈະບອກພວກເຈົ້າຢ່າງລະອຽດ ກ່ຽວກັບທຸກສິ່ງທີ່ມະນຸດບໍ່ສາມາດເຂົ້າໃຈໄດ້ ແຕ່ພວກເຈົ້າຈະຕ້ອງຮູ້ຈັກສິ່ງເຫຼົ່ານັ້ນຢູ່ເທິງແຜ່ນດິນໂລກ. ດັ່ງນັ້ນ, ເຮົາຈຶ່ງກ່າວວ່າ ເຮົາແມ່ນພຣະເຈົ້າເອງ ທີ່ຢູ່ເໜືອເວລາ ແລະ ສະຖານທີ່. ຖ້າບໍ່ແມ່ນຍ້ອນຈຸດປະສົງຂອງເຮົາໃນການຮັບເອົາບຸດຊາຍກົກ ແລະ ດ້ວຍເຫດນັ້ນ ກໍເປັນການເອົາຊະນະຊາຕານ, ເຮົາກໍອາດກັບຄືນສູ່ພູເຂົາຊີໂອນແລ້ວ; ຖ້າມັນເປັນຢ່າງອື່ນ, ເຮົາອາດຈະບໍ່ມີວັນສ້າງມະນຸດຊາດແທ້ໆ. ເຮົາກຽດຊັງໂລກຂອງມະນຸດ ແລະ ເຮົາກຽດຊັງຜູ້ຄົນ ທີ່ອອກຈາກເຮົາ ເຖິງຂັ້ນພິຈາລະນາທຳລາຍມະນຸດຊາດທັງໝົດດ້ວຍການເຂົ້າໂຈມຕີຢ່າງໄວໃນຄັ້ງດຽວ. ຢ່າງໃດກໍຕາມ, ພາລະກິດຂອງເຮົາແມ່ນມີລຳດັບ ແລະ ໂຄງສ້າງ, ຄວາມສາມາດໃນການຕັດສິນຄວາມສຳຄັນ ແລະ ຄວາມບໍ່ຮຸນແຮງ ແລະ ມັນບໍ່ໄດ້ເປັນໄປໂດຍບໍ່ມີການວາງແຜນ. ທຸກສິ່ງທີ່ເຮົາເຮັດແມ່ນມີເຈດຕະນາເພື່ອເອົາຊະນະຊາຕານ ແລະ ຍິ່ງໄປກວ່ານັ້ນ ແມ່ນມີເຈດຕະນາເພື່ອເຮັດໃຫ້ເຮົາສາມາດຢູ່ຮ່ວມກັບບຸດຊາຍກົກຂອງເຮົາໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້. ນີ້ແມ່ນເປົ້າໝາຍຂອງເຮົາ.

# ພາກທີສອງ

# ພຣະທຳຂອງພຣະເຈົ້າ ຕໍ່ກັບຈັກກະວານທັງໝົດ

(ວັນທີ 20 ກຸມພາ, 1992 ຫາ ວັນທີ 1 ມິຖຸນາ, 1992)

# ບົດນຳ

ໜັງສື "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ" ແມ່ນສ່ວນທີສອງຂອງພຣະຄຳທີ່ພຣະຄຣິດໄດ້ກ່າວໃນຕົວຕົນຂອງພຣະເຈົ້າເອງ. ພຣະທຳເຫຼົ່ານີ້ປົກຄຸມຊ່ວງເວລານັບຕັ້ງແຕ່ວັນທີ 20 ກຸມພາ 1992 ຈົນເຖິງວັນທີ 1 ມິຖຸນາ 1992 ແລະ ປະກອບມີທັງໝົດສີ່ສິບເຈັດບົດ. ລັກສະນະ, ເນື້ອຫາ ແລະ ທັດສະນະຂອງພຣະທຳຂອງພຣະເຈົ້າທີ່ຢູ່ໃນພຣະຄຳເຫຼົ່ານີ້ບໍ່ໄດ້ຄືກັນກັບໜັງສື "ພຣະຄຳຂອງພຣະຄຣິດໃນຕົ້ນເດີມ" ທັງໝົດ. ໜັງສື "ພຣະຄຳຂອງພຣະຄຣິດໃນຕົ້ນເດີມ" ເປີດໂປງ ແລະ ນຳພາພຶດຕິກຳພາຍນອກຂອງຜູ້ຄົນ ແລະ ຊີວິດຝ່າຍວິນຍານທີ່ທຳມະດາຂອງພວກເຂົາ. ໃນທີ່ສຸດແລ້ວ, ມັນກໍຈົບລົງດ້ວຍ "ການທົດລອງຂອງຜູ້ບໍລິການ". ເຖິງຢ່າງໃດກໍຕາມ ໜັງສື "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ" ເປີດສາກດ້ວຍການສິ້ນສຸດຕົວຕົນຂອງຜູ້ບໍລິການ ແລະ ເລີ່ມຕົ້ນຊີວິດຂອງພວກເຂົາໃນຖານະເປັນປະຊາຊົນຂອງພຣະເຈົ້າ. ມັນນຳພາຜູ້ຄົນໄປສູ່ຈຸດສູງສຸດຄັ້ງທີສອງຂອງພາລະກິດຂອງພຣະເຈົ້າ ເຊິ່ງຢູ່ໃນລະຫວ່າງຊ່ວງໄລຍະເວລາທີ່ພວກເຂົາໄດ້ຜະເຊີນກັບການທົດລອງຂອງທະເລສາບແຫ່ງໄຟ, ການທົດລອງແຫ່ງຄວາມຕາຍ ແລະ ເວລາແຫ່ງການຮັກພຣະເຈົ້າ. ສອງສາມບາດກ້າວເຫຼົ່ານີ້ເປີດໂປງຄວາມຂີ້ຮ້າຍຂອງມະນຸດຕໍ່ໜ້າພຣະເຈົ້າຢ່າງສົມບູນ ພ້ອມທັງໃບໜ້າທີ່ແທ້ຈິງຂອງມະນຸດ. ໃນທີ່ສຸດແລ້ວ ພຣະເຈົ້າກໍສຳເລັດບົດທີ່ພຣະອົງມອບໃຫ້ກັບມະນຸດ, ສິ້ນສຸດບາດກ້າວທັງໝົດຂອງການບັງເກີດເປັນມະນຸດຄັ້ງນີ້ຂອງການເອົາຊະນະຄົນກຸ່ມທຳອິດຂອງພຣະເຈົ້າ.

ໃນໜັງສື "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ" ພຣະເຈົ້າກ່າວພຣະທຳຂອງພຣະອົງຈາກທັດສະນະຂອງພຣະວິນຍານ. ລັກສະນະທີ່ພຣະອົງກ່າວແມ່ນບໍ່ສາມາດບັນລຸໄດ້ໂດຍມະນຸດຊາດ. ຍິ່ງໄປກວ່ານັ້ນ ຄຳສັບ ແລະ ລັກສະນະແຫ່ງພຣະທຳຂອງພຣະອົງແມ່ນສວຍງາມ ແລະ ດົນໃຈ ແລະ ບໍ່ມີຮູບແບບວັນນະຄະດີໃດຂອງມະນຸດສາມາດແທນທີ່ສິ່ງເຫຼົ່ານັ້ນໄດ້. ພຣະທຳທີ່ພຣະອົງໃຊ້ເພື່ອເປີດໂປງມະນຸດກໍຖືກຕ້ອງ, ບໍ່ມີປັດຊະຍາໃດສາມາດໂຕ້ແຍ້ງພວກມັນໄດ້ ແລະ ພວກມັນເຮັດໃຫ້ທຸກຄົນຍອມຈຳນົນ. ເຊັ່ນດຽວກັບມີດທີ່ແຫຼມຄົມ, ພຣະທຳທີ່ພຣະເຈົ້າໃຊ້ເພື່ອພິພາກສາມະນຸດໄດ້ຕັດທະລຸເຂົ້າໃສ່ສ່ວນເລິກຂອງຈິດວິນຍານຂອງຜູ້ຄົນ, ຕັດເຂົ້າເລິກຫຼາຍຈົນເຮັດໃຫ້ພວກເຂົາບໍ່ມີບ່ອນລີ້. ພຣະທຳທີ່ພຣະອົງປອບໃຈຜູ້ຄົນກໍມີຄວາມກະລຸນາ ແລະ ຄວາມຮັກຄວາມເມດຕາ, ພວກມັນອົບອຸ່ນຄືກັນກັບອ້ອມກອດຂອງແມ່ອັນເປັນທີ່ຮັກ ແລະ ພວກມັນເຮັດໃຫ້ຜູ້ຄົນຮູ້ສຶກໝັ້ນຄົງດັ່ງທີ່ບໍ່ເຄີຍເປັນມາກ່ອນ. ລັກສະນະໜຶ່ງທີ່ຍິ່ງໃຫຍ່ທີ່ສຸດຂອງພຣະຄຳເຫຼົ່ານີ້ກໍຄື ໃນລະຫວ່າງຂັ້ນຕອນນີ້ ພຣະເຈົ້າບໍ່ໄດ້ກ່າວໂດຍໃຊ້ຕົວຕົນຂອງພຣະເຢໂຮວາ ຫຼື ພຣະເຢຊູຄຣິດ ຫຼື ພຣະຄຣິດແຫ່ງຍຸກສຸດທ້າຍ. ກົງກັນຂ້າມ, ໂດຍໃຊ້ຕົວຕົນຕາມທຳມະຊາດຂອງພຣະອົງ ທີ່ເປັນພຣະຜູ້ສ້າງ, ພຣະອົງໄດ້ກ່າວ ແລະ ສັ່ງສອນທຸກຄົນທີ່ຕິດຕາມພຣະອົງ ແລະ ທຸກຄົນທີ່ຍັງບໍ່ໄດ້ຕິດຕາມພຣະອົງ. ມັນຖືກຕ້ອງຢ່າງຍິ່ງທີ່ຈະເວົ້າວ່າ ນີ້ຄືຄັ້ງທຳອິດນັບຕັ້ງແຕ່ການເນລະມິດສ້າງໂລກ ທີ່ພຣະເຈົ້າໄດ້ກ່າວຕໍ່ມະນຸດຊາດທັງປວງ. ພຣະເຈົ້າບໍ່ເຄີຍກ່າວຕໍ່ມະນຸດຊາດທີ່ຖືກສ້າງຢ່າງລາຍລະອຽດດັ່ງກ່າວ ແລະ ເປັນລະບົບລະບຽບເຊັ່ນນີ້ມາກ່ອນ. ແນ່ນອນ

ນີ້ຍັງເປັນຄັ້ງທຳອິດທີ່ພຣະອົງໄດ້ກ່າວຕໍ່ມະນຸດຫຼາຍເຊັ່ນນີ້ ແລະ ກ່າວເປັນເວລາດົນນານ. ມັນບໍ່ເຄີຍມີມາກ່ອນເລີຍ. ຍິ່ງໄປກວ່ານັ້ນ ພຣະຄຳເຫຼົ່ານີ້ໄດ້ສ້າງເປັນຂໍ້ຄວາມທຳອິດທີ່ພຣະເຈົ້າກ່າວທ່າມກາງມະນຸດຊາດ ເຊິ່ງພຣະອົງໃຊ້ເພື່ອເປີດໂປງຜູ້ຄົນ, ນຳພາພວກເຂົາ, ພິພາກສາພວກເຂົາ ແລະ ກ່າວກັບພວກເຂົາດ້ວຍໃຈຈິງ ແລະ ດ້ວຍເຫດນັ້ນ ພວກມັນກໍຍັງເປັນພຣະຄຳທຳອິດທີ່ພຣະເຈົ້າເຮັດໃຫ້ຜູ້ຄົນຮູ້ຈັກບາດກ້າວຂອງພຣະອົງ, ສະຖານທີ່ໆພຣະອົງນອນ, ອຸປະນິໄສຂອງພຣະເຈົ້າ, ສິ່ງທີ່ພຣະເຈົ້າມີ ແລະ ເປັນ, ຄວາມຄິດຂອງພຣະເຈົ້າ ແລະ ຄວາມຫ່ວງໃຍຂອງພຣະອົງສຳລັບມະນຸດຊາດ. ມັນສາມາດເວົ້າໄດ້ວ່າ ສິ່ງເຫຼົ່ານີ້ແມ່ນພຣະຄຳທຳອິດທີ່ພຣະເຈົ້າໄດ້ກ່າວຕໍ່ມະນຸດຊາດຈາກສະຫວັນຊັ້ນສາມ ນັບຕັ້ງແຕ່ການເນລະມິດສ້າງ ແລະ ເປັນຄັ້ງທຳອິດທີ່ພຣະເຈົ້າໄດ້ໃຊ້ຕົວຕົນຕາມທຳມະຊາດຂອງພຣະອົງເພື່ອປາກົດ ແລະ ສະແດງເຖິງສຽງຈາກຫົວໃຈຂອງພຣະອົງຕໍ່ມະນຸດໃນທ່າມກາງພຣະທຳ.

ພຣະຄຳເຫຼົ່ານີ້ເລິກເຊິ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້; ພວກມັນບໍ່ເຂົ້າໃຈໄດ້ງ່າຍ ຫຼື ເປັນໄປບໍ່ໄດ້ທີ່ຈະເຂົ້າໃຈຈຸດກຳເນີດ ແລະ ເປົ້າໝາຍຂອງພຣະທຳຂອງພຣະເຈົ້າ. ສະນັ້ນ ພຣະຄຣິດຈຶ່ງໄດ້ເພີ່ມຄຳອະທິບາຍຫຼັງຈາກແຕ່ລະບົດ ໂດຍໃຊ້ພາສາທີ່ງ່າຍຕໍ່ການເຂົ້າໃຈຂອງມະນຸດ ເພື່ອນຳຄວາມຊັດເຈນມາສູ່ພາກສ່ວນໃຫຍ່ຂອງພຣະຄຳ. ເມື່ອລວມກັບພຣະຄຳເອງ, ສິ່ງນີ້ເຮັດໃຫ້ມັນງ່າຍຂຶ້ນສຳລັບທຸກຄົນທີ່ຈະເຂົ້າໃຈ ແລະ ຮູ້ຈັກພຣະທຳຂອງພຣະເຈົ້າ. ພວກເຮົາເຮັດໃຫ້ພຣະທຳເຫຼົ່ານີ້ເປັນພາກພະໜວກໃນໜັງສື "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ". ໃນພຣະທຳເຫຼົ່ານີ້, ພຣະຄຣິດໄດ້ສະໜອງຄຳອະທິບາຍ ໂດຍໃຊ້ການຈັດລຽງຄຳເວົ້າທີ່ງ່າຍຕໍ່ການເຂົ້າໃຈທີ່ສຸດ. ການລວມກັນຂອງທັງສອງຢ່າງຄືການຈັບຄູ່ທີ່ສົມບູນຂອງຄວາມເປັນພຣະເຈົ້າ ແລະ ພຣະເຈົ້າໃນຄວາມເປັນມະນຸດ. ເຖິງແມ່ນພຣະເຈົ້າກ່າວໃນທັດສະນະຂອງບຸກຄົນທີສາມໃນພາກພະໜວກ, ບໍ່ມີຜູ້ໃດສາມາດປະຕິເສດໄດ້ວ່າ ພຣະທຳເຫຼົ່ານີ້ຖືກກ່າວໂດຍພຣະເຈົ້າເປັນການສ່ວນຕົວ, ຍ້ອນບໍ່ມີມະນຸດຄົນໃດສາມາດອະທິບາຍພຣະທຳຂອງພຣະເຈົ້າໄດ້ຢ່າງຊັດເຈນ; ມີພຽງແຕ່ພຣະເຈົ້າເອງທີ່ສາມາດຊີ້ແຈງຈຸດກຳເນີດ ແລະ ເປົ້າໝາຍຂອງພຣະຄຳຂອງພຣະອົງ. ສະນັ້ນ ເຖິງວ່າພຣະເຈົ້າຈະກ່າວໂດຍໃຊ້ຫຼາຍລັກສະນະ, ເປົ້າໝາຍຂອງພາລະກິດຂອງພຣະອົງແມ່ນບໍ່ເຄີຍປ່ຽນແປງ ຫຼື ຈຸດປະສົງໃນແຜນການຂອງພຣະອົງແມ່ນບໍ່ເຄີຍປ່ຽນແປງຈັກເທື່ອ.

ເຖິງແມ່ນໜັງສື "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ" ຈະຈົບລົງດ້ວຍບົດທີ່ພຣະເຈົ້າໄດ້ມອບໃຫ້ແກ່ມະນຸດ, ໃນຄວາມເປັນຈິງແລ້ວ ນີ້ຄືເວລາທີ່ພາລະກິດແຫ່ງການເອົາຊະນະ ແລະ ຄວາມລອດພົ້ນຂອງພຣະເຈົ້າທ່າມກາງມະນຸດ ແລະ ພາລະກິດຂອງພຣະອົງໃນການເຮັດໃຫ້ຜູ້ຄົນສົມບູນນັ້ນໄດ້ຖືກເປີດເຜີຍອອກຢ່າງເປັນທາງການ. ສະນັ້ນ ມັນຈຶ່ງເໝາະສົມສຳລັບພວກເຮົາທີ່ຈະຖືວ່າໜັງສື "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ" ເປັນຄຳທຳ ນວາຍຂອງພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍ. ຍ້ອນວ່າ ມີພຽງຫຼັງຈາກຈຸດນີ້ເທົ່ານັ້ນ, ບຸດທີ່ບັງເກີດເປັນມະນຸດຈະເລີ່ມຕົ້ນປະຕິບັດພາລະກິດຢ່າງເປັນທາງການ ແລະ ກ່າວໂດຍໃຊ້ຕົວຕົນຂອງພຣະຄຣິດ, ຍ່າງທົ່ວຄຣິສຕະຈັກຕ່າງໆ ແລະ ສະໜອງຊີວິດ ແລະ ຫົດນໍ້າ ແລະ ລ້ຽງດູປະຊາຊົນທຸກຄົນຂອງພຣະອົງ ເຊິ່ງໄດ້ເຮັດໃຫ້ເກີດພຣະຄຳຫຼາຍຂໍ້ໃນໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ".

# ບົດທີ 1

ຄົນທີ່ໄດ້ເຫັນພຣະທຳຂອງເຮົາຍອມຮັບພຣະທຳເຫຼົ່ານັ້ນແທ້ບໍ? ພວກເຈົ້າຮູ້ຈັກເຮົາແທ້ບໍ? ພວກເຈົ້າໄດ້ຮຽນຮູ້ໃນການເຊື່ອຟັງແທ້ບໍ? ພວກເຈົ້າສະຫຼະຕົນເອງເພື່ອເຮົາຢ່າງຈິງໃຈບໍ? ພວກເຈົ້າໄດ້ຍຶດໝັ້ນ ແລະ ຕັ້ງໃຈເປັນພະຍານໃຫ້ກັບເຮົາ ເມື່ອຢູ່ຕໍ່ໜ້າມັງກອນແດງທີ່ຍິ່ງໃຫຍ່ຢ່າງແທ້ຈິງບໍ? ການອຸທິດຂອງພວກເຈົ້າເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ອັບອາຍແທ້ບໍ? ຜ່ານການທົດລອງແຫ່ງພຣະທຳຂອງເຮົາເທົ່ານັ້ນ ເຮົາຈຶ່ງສາມາດບັນລຸເປົ້າໝາຍຂອງເຮົາໃນການຊຳລະລ້າງຄຣິສຕະຈັກ ແລະ ເລືອກຄົນທີ່ຮັກເຮົາຢ່າງແທ້ຈິງໄດ້. ຖ້າເຮົາບໍ່ປະຕິບັດພາລະກິດໃນລັກສະນະນີ້, ແລ້ວຜູ້ໃດຈະສາມາດຮູ້ຈັກເຮົາໄດ້? ຜູ້ໃດສາມາດເຂົ້າໃຈຄວາມສະຫງ່າງາມຂອງເຮົາ, ຄວາມໂກດຮ້າຍຂອງເຮົາ ແລະ ສະຕິປັນຍາຂອງເຮົາຜ່ານທາງພຣະທຳຂອງເຮົາໄດ້ບໍ່? ເມື່ອເຮົາໄດ້ເລີ່ມຕົ້ນພາລະກິດຂອງເຮົາແລ້ວ ເຮົາກໍຈະເຮັດໃຫ້ມັນສຳເລັດ, ແຕ່ເຖິງຢ່າງໃດມັນກໍຍັງເປັນເຮົາທີ່ວັດແທກຫົວໃຈຂອງມະນຸດໃຫ້ເລິກທີ່ສຸດ. ໃນຄວາມເປັນຈິງແລ້ວ, ບໍ່ມີຜູ້ໃດສາມາດເຂົ້າໃຈເຮົາໄດ້ຢ່າງແທ້ຈິງ, ສະນັ້ນ ເຮົາຈຶ່ງໃຊ້ພຣະທຳເພື່ອນຳພາມະນຸດທຸກຄົນ ແລະ ນຳພາພວກເຂົາທຸກຄົນໄປສູ່ຍຸກໃໝ່. ໃນທີ່ສຸດແລ້ວ ເຮົາຈະໃຊ້ພຣະທຳເພື່ອເຮັດໃຫ້ພາລະກິດທັງໝົດຂອງເຮົາສຳເລັດ ໂດຍເຮັດໃຫ້ຄົນທີ່ຮັກເຮົາຢ່າງແທ້ຈິງກັບຄືນສູ່ອານາຈັກຂອງເຮົາຢ່າງຍອມຈຳນົນ ແລະ ເພື່ອດຳລົງຊີວິດຕໍ່ໜ້າບັນລັງຂອງເຮົາ. ສະຖານະການໃນປັດຈຸບັນບໍ່ຄືແຕ່ກ່ອນ ແລະ ພາລະກິດຂອງເຮົາໄດ້ເຂົ້າສູ່ຈຸດເລີ່ມຕົ້ນໃໝ່ແລ້ວ. ເມື່ອເປັນແບບນັ້ນ, ມັນກໍຈະມີວິທີການໃໝ່: ຄົນທີ່ເຫັນພຣະທຳຂອງເຮົາ ແລະ ຍອມຮັບເອົາພຣະທຳເປັນຊີວິດຈິດໃຈຂອງພວກເຂົາ ແມ່ນຄົນແຫ່ງອານາຈັກຂອງເຮົາ. ຍ້ອນພວກເຂົາຢູ່ໃນອານາຈັກຂອງເຮົາ, ພວກເຂົາແມ່ນຄົນແຫ່ງອານາຈັກຂອງເຮົາ. ເພາະວ່າພວກເຂົາໄດ້ຮັບການນຳພາໂດຍພຣະທຳຂອງເຮົາ, ເຖິງແມ່ນພວກເຂົາຈະຖືກເອີ້ນວ່າປະຊາຊົນຂອງເຮົາ, ຕຳແໜ່ງນີ້ກໍບໍ່ໄດ້ເປັນຮອງການຖືກເອີ້ນວ່າ "ບຸດຊາຍ" ຂອງເຮົາ. ເມື່ອເປັນປະຊາຊົນຂອງເຮົາ, ທຸກຄົນກໍຕ້ອງຮັບໃຊ້ຢ່າງຊື່ສັດທີ່ສຸດ ແລະ ປະຕິບັດໜ້າທີ່ຂອງພວກເຂົາໃນອານາຈັກຂອງເຮົາ. ຜູ້ໃດກໍຕາມທີ່ເຮັດຜິດຕໍ່ກົດບັນຍັດແຫ່ງການບໍລິຫານຂອງເຮົາຈະຕ້ອງໄດ້ຮັບການລົງໂທດຂອງເຮົາ. ນີ້ແມ່ນຄຳເຕືອນຂອງເຮົາຕໍ່ທຸກຄົນ.

ໃນຕອນນີ້ ວິທີການໃໝ່ຖືກນຳໃຊ້ແລ້ວ, ສິ່ງທີ່ຜ່ານມາບໍ່ຈຳເປັນຕ້ອງເວົ້າເຖິງອີກ. ເຖິງຢ່າງໃດກໍຕາມ, ດັ່ງທີ່ເຮົາໄດ້ກ່າວມາກ່ອນໜ້ານີ້: ເຮົາຍຶດໝັ້ນໃນສິ່ງທີ່ເຮົາກ່າວ, ສິ່ງທີ່ເຮົາຍຶດໝັ້ນ ເຮົາເຮັດໃຫ້ສຳເລັດສະເໝີ ແລະ ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້; ນີ້ເປັນສິ່ງທີ່ແນ່ນອນ. ບໍ່ວ່າຈະເປັນພຣະທຳທີ່ເຮົາກ່າວໃນອະດີດ ຫຼື ພຣະທຳທີ່ເຮົາຈະກ່າວໃນອະນາຄົດ, ເຮົາຈະເຮັດໃຫ້ທຸກສິ່ງເປັນຈິງເທື່ອລະກ້າວ ແລະ ເຮັດໃຫ້ມະນຸດຊາດທຸກຄົນເຫັນສິ່ງດັ່ງກ່າວເປັນຈິງ. ນີ້ແມ່ນຫຼັກການທີ່ຢູ່ເບື້ອງຫຼັງພຣະທຳ ແລະ ພາລະກິດຂອງເຮົາ. ໃນເມື່ອການສ້າງຄຣິສຕະຈັກຂອງເຮົາໄດ້ຖືກເຮັດໃຫ້ສຳເລັດແລ້ວ, ບັດນີ້ບໍ່ແມ່ນຍຸກແຫ່ງການສ້າງຄຣິສຕະຈັກອີກຕໍ່ໄປ ແຕ່ກົງກັນຂ້າມ ແມ່ນຍຸກທີ່ອານາຈັກຖືກສ້າງຈົນສຳເລັດແລ້ວ. ແຕ່ວ່າ ໃນເມື່ອພວກເຈົ້າຍັງຢູ່ເທິງແຜ່ນດິນໂລກ, ການຊຸມນຸມຂອງພວກເຈົ້າຍັງຈະຮູ້ກັນ

ໃນນາມວ່າ "ຄຣິສຕະຈັກ". ຢ່າງໃດກໍຕາມ, ທາດແທ້ຂອງຄຣິສຕະຈັກແມ່ນບໍ່ຄືເກົ່າ, ມັນຄືຄຣິສຕະຈັກທີ່ຖືກສ້າງຂຶ້ນຢ່າງສຳເລັດ. ສະນັ້ນ, ເຮົາຈຶ່ງເວົ້າວ່າອານາຈັກຂອງເຮົາໄດ້ລົງມາເທິງແຜ່ນດິນໂລກແລ້ວ. ບໍ່ມີໃຜສາມາດເຂົ້າໃຈແກ່ນແທ້ແຫ່ງພຣະທຳຂອງເຮົາໄດ້ ແລະພວກເຂົາກໍບໍ່ສາມາດເຂົ້າໃຈຈຸດປະສົງຂອງເຮົາໃນການກ່າວເຖິງພຣະທຳເຫຼົ່ານັ້ນ. ຈາກລັກສະນະທີ່ເຮົາເວົ້າໃນມື້ນີ້, ພວກເຈົ້າຈະປະສົບກັບແສງສະຫວ່າງຢ່າງທັນທີທັນໃດ. ບາງຄົນອາດຈະຮ້ອງໄຫ້ຂຶ້ນດັງໆ; ບາງຄົນອາດຮູ້ສຶກຢ້ານວ່ານີ້ແມ່ນວິທີທີ່ເຮົາກ່າວ. ບາງຄົນອາດຍຶດຕິດກັບທັດສະນະແບບຫົວບູຮານໃນຂະນະທີ່ພວກເຂົາເຝົ້າເບິ່ງທຸກການເຄື່ອນໄຫວຂອງເຮົາ; ບາງຄົນອາດເສຍໃຈທີ່ໄດ້ສະແດງຄວາມໂສກເສົ້າຂອງພວກເຂົາ ຫຼື ຕໍ່ຕ້ານເຮົາໃນເວລານັ້ນ; ບາງຄົນອາດຍິນດີຢູ່ຂ້າງໃນ ຍ້ອນພວກເຂົາບໍ່ເຄີຍອອກຫ່າງຈາກພຣະນາມຂອງເຮົາຈັກເທື່ອ ພວກເຂົາຈຶ່ງຖືກເຮັດໃຫ້ຟື້ນຂຶ້ນໃໝ່. ອາດມີບາງຄົນທີ່ "ທໍລະມານ" ໂດຍພຣະທຳຂອງເຮົາເປັນເວລາດົນນານຈົນວ່າພວກເຂົາຕາຍໄປເຄິ່ງໜຶ່ງ, ບໍ່ມີກະຈິດກະໃຈ, ທໍ້ແທ້ ແລະ ບໍ່ມີໃຈທີ່ຈະສົນໃຈກັບພຣະທຳທີ່ເຮົາກ່າວອີກຕໍ່ໄປ, ເຖິງແມ່ນວ່າເຮົາໄດ້ປ່ຽນແປງວິທີການເວົ້າຂອງເຮົາ; ຫຼື ຄົນອື່ນຜູ້ທີ່ໄດ້ຮັບໃຊ້ເຮົາໂດຍອຸທິດຕົນຈົນເຖິງຈຸດໃດໜຶ່ງ, ໂດຍບໍ່ເຄີຍຈົ່ມຕໍ່ວ່າ, ບໍ່ເຄີຍສົງໄສ ໃນປັດຈຸບັນແມ່ນໂຊກດີທີ່ໄດ້ຮັບການປົດປ່ອຍເປັນອິດສະຫຼະ ແລະ ໃນຫົວໃຈຂອງພວກເຂົາ ພວກເຂົາຮູ້ສຶກຮູ້ບຸນຄຸນຕໍ່ເຮົາເໜືອຄຳບັນຍາຍ. ທຸກກໍລະນີຂ້າງເທິງແມ່ນໃຊ້ໄດ້ກັບມະນຸດທຸກຄົນໃນລະດັບແຕກຕ່າງກັນ. ແຕ່ວ່າ ອະດີດກໍຄືອະດີດ ແລະ ປັດຈຸບັນກໍໄດ້ມາຮອດແລ້ວ ຈຶ່ງບໍ່ຈຳເປັນຕ້ອງປາຖະໜາເຖິງອະດີດຄວາມຫຼັງອີກຕໍ່ໄປ ຫຼື ມີຄວາມຄິດກ່ຽວກັບອະນາຄົດ. ໃນການເປັນມະນຸດ, ຜູ້ໃດກໍຕາມທີ່ຕໍ່ຕ້ານຄວາມເປັນຈິງ ແລະ ບໍ່ປະຕິບັດສິ່ງຕ່າງໆຕາມການນຳພາຂອງເຮົາແມ່ນຈະບໍ່ມີຈຸດຈົບທີ່ດີ ມີແຕ່ຈະນຳເອົາຄວາມເດືອດຮ້ອນມາສູ່ພວກເຂົາເອງເທົ່ານັ້ນ. ຈາກທຸກສິ່ງທີ່ເກີດຂຶ້ນໃນຈັກກະວານ ແມ່ນບໍ່ມີສິ່ງໃດທີ່ຈະບໍ່ມີຄຳຕັດສິນສຸດທ້າຍຂອງເຮົາ. ມີສິ່ງໃດແດ່ທີ່ບໍ່ໄດ້ຢູ່ໃນກຳມືຂອງເຮົາ? ທຸກສິ່ງທີ່ເຮົາເວົ້າໄປແມ່ນຖືກເຮັດໃຫ້ສຳເລັດ ແລະ ໃນທ່າມກາງມະນຸດ ມີໃຜບໍທີ່ສາມາດປ່ຽນແປງຄວາມຄິດຂອງເຮົາໄດ້? ມັນອາດຈະແມ່ນສັນຍາທີ່ເຮົາສ້າງຂຶ້ນເທິງແຜ່ນດິນໂລກບໍ? ບໍ່ມີຫຍັງສາມາດຂັດຂວາງແຜນການຂອງເຮົາໃຫ້ກ້າວໄປຂ້າງໜ້າ; ເຮົາຢູ່ໃນພາລະກິດຂອງເຮົາຕະຫຼອດໄປ ພ້ອມທັງຢູ່ໃນແຜນການແຫ່ງການຄຸ້ມຄອງຂອງເຮົາ. ໃນທ່າມກາງມະນຸດມີຜູ້ໃດແດ່ທີ່ສາມາດຍື່ນມືເຂົ້າມາແຊກແຊງ? ບໍ່ແມ່ນເຮົາບໍທີ່ໄດ້ປັ້ນແຕ່ງສິ່ງເຫຼົ່ານີ້ດ້ວຍຕົວເຮົາເອງ? ໃນປັດຈຸບັນ ການເຂົ້າສູ່ໂລກນີ້ບໍ່ໄດ້ອອກຫ່າງຈາກແຜນການຂອງເຮົາ ຫຼື ນອກເໜືອສິ່ງທີ່ເຮົາໄດ້ທຳນາຍໄວ້; ທຸກສິ່ງລ້ວນແລ້ວແຕ່ຖືກເຮົາກຳນົດມາເປັນເວລາດົນນານແລ້ວ. ຜູ້ໃດທ່າມກາງພວກເຈົ້າທີ່ສາມາດຢັ່ງເຖິງຂັ້ນຕອນນີ້ຂອງແຜນການຂອງເຮົາບໍ? ປະຊາຊົນຂອງເຮົາຈະຟັງສຽງຂອງເຮົາ ແລະ ທຸກຄົນທີ່ຮັກເຮົາດ້ວຍຄວາມຈິງໃຈຈະກັບຄືນມາຢູ່ຕໍ່ໜ້າບັນລັງຂອງເຮົາຢ່າງແນ່ນອນ.

ວັນທີ 20 ກຸມພາ 1992

# ບົດທີ 2

ພ້ອມກັບການເຂົ້າສູ່ວິທີການໃໝ່ ກໍຈະມີບາດກ້າວໃໝ່ໃນພາລະກິດຂອງເຮົາ. ເໝືອນດັ່ງຢູ່ໃນອານາຈັກ, ເຮົາຈະເຮັດສິ່ງຕ່າງໆຜ່ານຄວາມເປັນພຣະເຈົ້າໂດຍກົງ, ນໍາພາທຸກບາດກ້າວໃນເສັ້ນທາງຢ່າງຊັດເຈນ ແລະ ຢ່າງລາຍລະອຽດທີ່ສຸດ ແລະ ປາສະຈາກການປົນເຈືອດ້ວຍເຈດຕະນາຂອງມະນຸດຢ່າງແນ່ນອນ. ຂ້າງລຸ່ມນີ້ອະທິບາຍເຖິງວິທີການປະຕິບັດຕົວຈິງ: ຍ້ອນຜ່ານຄວາມລໍາບາກ ແລະ ການຫຼໍ່ຫຼອມ ພວກເຂົາຈຶ່ງໄດ້ຮັບຕໍາແໜ່ງ "ປະຊາຊົນ" ແລະ ຍ້ອນພວກເຂົາເປັນປະຊາຊົນແຫ່ງອານາຈັກຂອງເຮົາ, ເຮົາຈຶ່ງຕ້ອງວາງເງື່ອນໄຂຢ່າງເຂັ້ມງວດສໍາລັບພວກເຂົາ ເຊິ່ງສູງກວ່າວິທີການຂອງພາລະກິດທີ່ເຮົາໃຊ້ກັບຮຸ່ນຜ່ານມາ. ມັນບໍ່ແມ່ນພຽງແຕ່ຄວາມເປັນຈິງແຫ່ງພຣະທໍາເທົ່ານັ້ນ, ແຕ່ທີ່ສໍາຄັນໄປກວ່ານັ້ນ ມັນຄືຄວາມເປັນຈິງໃນການປະຕິບັດ ແລະ ກ່ອນອື່ນໝົດ ສິ່ງນີ້ຕ້ອງຖືກເຮັດໃຫ້ສໍາເລັດ. ໃນທຸກຄໍາເວົ້າ ແລະ ການກະທໍາ, ພວກເຂົາຕ້ອງບັນລຸມາດຕະຖານທີ່ຈໍາເປັນຂອງປະຊາຊົນແຫ່ງອານາຈັກ ແລະ ຜູ້ໃດທີ່ເຮັດຜິດແມ່ນຈະຖືກກໍາຈັດທັນທີ ເພື່ອຫຼີກເວັ້ນບໍ່ໃຫ້ພວກເຂົານໍາເອົາຄວາມອັບອາຍມາສູ່ນາມຂອງເຮົາ. ເຖິງຢ່າງໃດກໍຕາມ, ສໍາລັບຄົນທີ່ໂງ່ຈ້າຜູ້ທີ່ບໍ່ສາມາດເຫັນ ແລະ ເຂົ້າໃຈຢ່າງຊັດເຈນແມ່ນຈະຖືກຍົກເວັ້ນ. ໃນການສ້າງອານາຈັກຂອງເຮົາ, ໃຫ້ໃສ່ໃຈກັບການກິນ ແລະ ດື່ມພຣະທໍາຂອງເຮົາ, ຮັບຮູ້ສະຕິປັນຍາຂອງເຮົາ ແລະ ຄົ້ນຫາຫຼັກຖານຜ່ານພາລະກິດຂອງເຮົາ. ຖ້າຜູ້ໃດໃສ່ໃຈກັບປຶ້ມທີ່ບໍ່ມີພຣະທໍາຂອງເຮົາ, ເຮົາຈະບໍ່ຕ້ອງການຢ່າງແນ່ນອນ; ຜູ້ຄົນດັ່ງກ່າວຄືຍິງໂສເພນີທີ່ຕໍ່ຕ້ານເຮົາ. ໃນຖານະທີ່ເປັນອັກຄະສາວົກ, ເຈົ້າຕ້ອງບໍ່ອາໄສຢູ່ໃນເຮືອນຄົນເກີນໄປ. ຖ້າເຈົ້າເຮັດແບບນັ້ນ ເຮົາກໍຈະບໍ່ບັງຄັບເຈົ້າ ແຕ່ ເຮົາຈະໂຍນຖິ້ມ ແລະ ບໍ່ໃຊ້ເຈົ້າອີກຕໍ່ໄປ. ເມື່ອອັກຄະສາວົກບໍ່ໄດ້ຢູ່ແຕ່ໃນເຮືອນ, ພວກເຂົາໃຊ້ເວລາຢູ່ແຕ່ໃນຄຣິສຕະຈັກເພື່ອຈະໄດ້ຮັບການສັ່ງສອນ. ອັກຄະສາວົກຕ້ອງເຂົ້າຮ່ວມຊຸມນຸມໃນຄຣິສຕະຈັກຢ່າງໜ້ອຍຄັ້ງໜຶ່ງໃນທຸກໆສອງຄັ້ງ. ດັ່ງນັ້ນ ການຊຸມນຸມຂອງຜູ້ຮ່ວມປະຕິບັດພາລະກິດ (ຮວມທັງການຊຸມນຸມຂອງອັກຄະສາວົກທັງໝົດ, ການຊຸມນຸມຂອງຜູ້ນໍາຄຣິສຕະຈັກທຸກຄົນ ແລະ ການຊຸມນຸມທັງໝົດສໍາລັບໄພ່ພົນທີ່ມີຄວາມເຂົ້າໃຈຢ່າງຊັດເຈນ) ຕ້ອງເກີດຂຶ້ນເປັນປະຈໍາ. ຢ່າງໜ້ອຍພວກເຈົ້າບາງຄົນຕ້ອງເຂົ້າຮ່ວມແຕ່ລະການຊຸມນຸມ ແລະ ອັກຄະສາວົກກໍຕ້ອງເອົາໃຈໃສ່ໃນການເຝົ້າເບິ່ງຄຣິສຕະຈັກເທົ່ານັ້ນ. ເງື່ອນໄຂສໍາລັບການສ້າງໄພ່ພົນຜ່ານມາແມ່ນເລິກເຊິ່ງຂຶ້ນຫຼາຍໃນປັດຈຸບັນ. ສໍາລັບຄົນທີ່ເຮັດຜິດກ່ອນທີ່ເຮົາເປັນພະຍານໃຫ້ກັບນາມຂອງເຮົາ ຍ້ອນຄວາມອຸທິດທີ່ພວກເຂົາມີສໍາລັບເຮົາ, ເຮົາຍັງຈະໃຊ້ພວກເຂົາຫຼັງຈາກທີ່ພວກເຂົາຖືກເຮົາທົດສອບ. ຢ່າງໃດກໍຕາມ, ສໍາລັບຄົນທີ່ເຮັດຜິດອີກຄັ້ງຫຼັງຈາກຄໍາພະຍານຂອງເຮົາ ແລະ ຕັ້ງໃຈທີ່ຈະເລີ່ມຕົ້ນໃໝ່, ຄົນປະເພດດັ່ງກ່າວຈະຍັງຄົງຢູ່ພາຍໃນຄຣິສຕະຈັກເທົ່ານັ້ນ. ຢ່າງໃດກໍຕາມ, ພວກເຂົາບໍ່ສາມາດປະໝາດ ແລະ ເສເພ, ແຕ່ກົງກັນຂ້າມ ພວກເຂົາຕ້ອງເຂັ້ມງວດຫຼາຍກວ່າຄົນອື່ນ. ແຕ່ສໍາລັບຄົນທີ່ບໍ່ແກ້ໄຂວິທີທາງຂອງພວກເຂົາຫຼັງຈາກທີ່ເຮົາໄດ້ກ່າວອອກໄປ, ພຣະວິນຍານຂອງເຮົາຈະປະຖິ້ມພວກເຂົາທັນທີ ແລະ ຄຣິສຕະຈັກກໍຈະມີສິດຕັດສິນລົງໂທດພວກເຂົາ ແລະ ຂັບໄລ່ພວກເຂົາອອກຈາກຄຣິສຕະຈັກ. ສິ່ງນີ້

ແມ່ນແນ່ນອນ ແລະ ຈະບໍ່ມີໜ້ອງໃຫ້ພິຈາລະນາ. ຖ້າຄົນໜຶ່ງລົ້ມລົງລະຫວ່າງການທົດລອງ ນັ້ນກໍຄື ຖ້າຄົນນັ້ນໜີໄປ, ໃຜກໍຕາມບໍ່ຄວນສົນໃຈກັບບຸກຄົນນັ້ນ, ເພື່ອຫຼີກເວັ້ນການທົດສອບເຮົາ ແລະ ປ່ອຍໃຫ້ຊາຕານເຂົ້າສູ່ຄຣິສຕະຈັກຢ່າງບ້າປ່ວງ. ນີ້ແມ່ນວິທີທີ່ເຮົາພິພາກສາຄົນດັ່ງກ່າວ, ໃຜກໍຕາມທີ່ເຮັດສິ່ງທີ່ບໍ່ຊອບທຳ ແລະ ປະພຶດໂດຍອີງໃສ່ອາລົມຂອງຕົນເອງຕໍ່ບຸກຄົນທີ່ໜີໄປນັ້ນ ບໍ່ພຽງແຕ່ຜູ້ທີ່ໜີໄປ ແຕ່ຜູ້ຄົນດັ່ງກ່າວກໍຈະຖືກຂັບໄລ່ອອກຈາກຕຳແໜ່ງປະຊາຊົນຂອງເຮົາເຊັ່ນກັນ. ອີກໜ້າທີ່ໜຶ່ງຂອງອັກຄະສາວົກແມ່ນການໃສ່ໃຈໃນການເຜີຍແຜ່ຂ່າວປະເສີດ. ແນ່ນອນ, ໄພ່ພົນທັງປວງກໍສາມາດປະຕິບັດພາລະກິດນີ້ເຊັ່ນກັນ, ແຕ່ພວກເຂົາຕ້ອງມີສະຕິປັນຍາໃນການເຮັດສິ່ງນີ້ ແລະ ຕ້ອງລະເວັ້ນຈາກການສ້າງບັນຫາ. ສິ່ງທີ່ກ່າວມາຂ້າງເທິງແມ່ນວິທີການປະຕິບັດໃນປັດຈຸບັນ. ອີກຢ່າງ ເພື່ອເປັນການເຕືອນໃຈ ພວກເຈົ້າຕ້ອງໃສ່ໃຈກັບການເຮັດໃຫ້ບົດເທດສະໜາຂອງພວກເຈົ້າເລິກເຊິ່ງຍິ່ງຂຶ້ນ, ເພື່ອວ່າທຸກຄົນຈະໄດ້ເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງເຮົາ. ພວກເຈົ້າຕ້ອງຕິດຕາມພຣະທຳຂອງເຮົາຢ່າງໃກ້ຊິດ ແລະ ເຮັດໃຫ້ທຸກຄົນເຂົ້າໃຈພຣະທຳເຫຼົ່ານັ້ນຢ່າງຊັດເຈນ ແລະ ບໍ່ມີຂໍ້ສົງໄສໃດໆທັງສິ້ນ. ສິ່ງນີ້ເປັນເລື່ອງສຳຄັນທີ່ສຸດ. ຄົນທີ່ຢູ່ທ່າມກາງປະຊາຊົນຂອງເຮົາທີ່ມີຄວາມຄິດຫັກຫຼັງຕ້ອງຖືກກຳຈັດ ແລະ ຕ້ອງບໍ່ໄດ້ຮັບອະນຸຍາດໃຫ້ຢູ່ໃນເຮືອນຂອງເຮົາດົນເກີນໄປ ເພື່ອບໍ່ໃຫ້ພວກເຂົານຳເອົາຄວາມອັບອາຍມາສູ່ນາມຂອງເຮົາ.

ວັນທີ 21 ກຸມພາ 1992

# ບົດທີ 3

ເນື່ອງຈາກພວກເຈົ້າຖືກເອີ້ນວ່າ ປະຊາຊົນຂອງເຮົາ, ສິ່ງຕ່າງໆຈຶ່ງບໍ່ຄືເກົ່າຕາມທີ່ເຄີຍເປັນ; ພວກເຈົ້າຄວນຟັງ ແລະ ເຊື່ອຟັງພຣະວັດຈະນະຂອງພຣະວິນຍານຂອງເຮົາ, ຕິດຕາມພາລະກິດຂອງເຮົາຢ່າງໃກ້ຊິດ ແລະ ອາດບໍ່ແຍກພຣະວິນຍານ ແລະ ເນື້ອໜັງຂອງເຮົາອອກຈາກກັນ ເພາະວ່າ ໂດຍທຳມະຊາດແລ້ວ ພວກເຮົາແມ່ນໜຶ່ງດຽວ ແລະ ບໍ່ໄດ້ຕ່າງຈາກກັນ. ໃຜກໍຕາມທີ່ແຍກພຣະວິນຍານ ແລະ ຄົນອອກຈາກກັນ ໂດຍສົນໃຈ ຢ່າງໃດຢ່າງໜຶ່ງລະຫວ່າງຄົນ ຫຼື ພຣະວິນຍານ ຈະຕ້ອງທົນທຸກກັບການສູນເສຍ ແລະ ຈະສາມາດດື່ມໄດ້ແຕ່ຈາກຈອກທີ່ຂົມຂື່ນຂອງພວກເຂົາເທົ່ານັ້ນ ໂດຍບໍ່ມີທາງເລືອກອື່ນ. ຜູ້ທີ່ສາມາດເບິ່ງອອກວ່າ ພຣະວິນຍານ ແລະ ຄົນເປັນສິ່ງດຽວກັນທີ່ແຍກບໍ່ໄດ້ເທົ່ານັ້ນ ທີ່ຈະມີຄວາມຮູ້ຢ່າງພຽງພໍກ່ຽວກັບເຮົາ; ຊີວິດພາຍໃນພວກເຂົາຈະມີການປ່ຽນແປງເກີດຂຶ້ນເທື່ອລະໜ້ອຍ. ເພື່ອໃຫ້ຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາດຳເນີນໄປຢ່າງດີ ໂດຍບໍ່ມີສິ່ງໃດຂັດຂວາງ ເຮົາຈຳເປັນຕ້ອງນຳໃຊ້ຄວາມບໍລິສຸດຂອງພຣະທຳ ເພື່ອທົດສອບທຸກຄົນທີ່ຢູ່ໃນເຮືອນຂອງເຮົາ ແລະ ນຳໃຊ້ວິທີການເຮັດພາລະກິດ ເພື່ອທົດສອບຜູ້ທີ່ຕິດຕາມເຮົາ. ພາຍໃຕ້ສະຖານະການເຫຼົ່ານີ້, ອາດເວົ້າໄດ້ວ່າ ພວກເຂົາທຸກຄົນໄດ້ໝົດຫວັງ; ໃນຖານະເປັນຄົນ, ບໍ່ມີແມ່ນແຕ່ຄົນດຽວໃນບັນດາພວກເຂົາທີ່ບໍ່ມີສະພາບບໍ່ດີ ແລະ ຂີ້ຄ້ານ ຄືກັບວ່າ ພື້ນທີ່ທັງໝົດຂອງພວກເຂົາຖືກປ່ຽນແປງ. ບາງຄົນຕໍ່ວ່າສະຫວັນ ແລະ ແຜ່ນດິນໂລກ; ບາງຄົນທີ່ຢູ່ໃນຄວາມສິ້ນຫວັງຂອງພວກເຂົາໄດ້ກຽມໃຈ ແລະ ຍອມຮັບເອົາການທົດສອບຈາກພຣະທຳຂອງເຮົາ; ບາງຄົນແນມເບິ່ງເທິງຟ້າ ແລະ ຫາຍໃຈໃຫຍ່, ຕາຂອງພວກເຂົາເຕັມໄປດ້ວຍນໍ້າຕາ ຄືກັບວ່າ ພວກເຂົາວຸ້ນວາຍໃຈ ເນື່ອງຈາກການຕາຍກ່ອນກຳນົດຂອງເດັກເກີດໃໝ່; ບາງຄົນຮູ້ສຶກເຖິງຄວາມອັບອາຍໃນການດຳລົງຊີວິດ ແລະ ດ້ວຍເຫດນັ້ນ ຈຶ່ງອະທິຖານໃຫ້ພຣະເຈົ້າເອົາພວກເຂົາໄປໄວໆ; ບາງຄົນໃຊ້ເວລາໝົດມື້ຢູ່ໃນຄວາມມຶດມົວ ຄືກັບວ່າພວກເຂົາບໍ່ສະບາຍຢ່າງໜັກ ແລະ ຍັງບໍ່ໄດ້ສະຕິກັບຄືນມາ; ພາຍຫຼັງທີ່ໄດ້ຕຳນິຕໍ່ວ່າ ບາງຄົນກໍອອກໄປຢ່າງງຽບໆ; ແລະ ບາງຄົນຍັງສັນລະເສີນເຮົາຈາກບ່ອນຂອງພວກເຂົາ ເຖິງວ່າ ພວກເຂົາຂ້ອນຂ້າງຍັງບໍ່ດີເທື່ອ. ໃນປັດຈຸບັນ, ເມື່ອທຸກຢ່າງຖືກເປີດເຜີຍ ເຮົາກໍບໍ່ຈຳເປັນຕ້ອງເວົ້າກ່ຽວກັບອະດີດອີກ; ທີ່ສຳຄັນທີ່ສຸດກໍຄື ພວກເຈົ້າຍັງຄວນມີຄວາມສາມາດໃນການຈິງຮັກພັກດີຫຼາຍທີ່ສຸດຈາກບ່ອນທີ່ເຮົາປະທານໃຫ້ພວກເຈົ້າໃນປັດຈຸບັນ ເພື່ອວ່າ ທຸກສິ່ງທີ່ພວກເຈົ້າເຮັດຈະສົມຄວນໄດ້ຮັບການອະນຸມັດຈາກເຮົາ ແລະ ທຸກຢ່າງທີ່ພວກເຈົ້າເວົ້າແມ່ນຜົນຜະລິດຈາກແສງສະຫວ່າງ ແລະ ແສງເຍືອງທາງຂອງເຮົາ ແລະ ໃນທີ່ສຸດ ສິ່ງທີ່ພວກເຈົ້າດຳລົງຢູ່ແມ່ນຮູບພາບຂອງເຮົາ ແລະ ການສະແດງອອກທັງໝົດຂອງເຮົາ.

ພຣະທຳຂອງເຮົາຖືກປ່ອຍອອກ ແລະ ຖືກສະແດງອອກມາໃນເວລາ ຫຼື ສະຖານທີ່ໃດກໍໄດ້ ແລະ ເຊັ່ນດຽວກັນນັ້ນ ພວກເຈົ້າກໍຄວນຮູ້ຈັກຕົວເອງໃນທຸກເວລາທີ່ຢູ່ຕໍ່ໜ້າເຮົາ. ຢ່າງໃດກໍຕາມ ເປັນເພາະວ່າ ປັດຈຸບັນບໍ່ຄືກັບສິ່ງທີ່ມາກ່ອນໜ້ານັ້ນ ແລະ ເຈົ້າບໍ່ສາມາດເຮັດສິ່ງໃດທີ່ເຈົ້າປາຖະໜາໃຫ້

ສຳເລັດໄດ້ອີກຕໍ່ໄປ. ກົງກັນຂ້າມ, ພາຍໃຕ້ການຊີ້ນຳຂອງພຣະທຳຂອງເຮົາ ເຈົ້າຕ້ອງມີຄວາມສາມາດເອົາຊະນະຮ່າງກາຍຂອງເຈົ້າ, ເຈົ້າຕ້ອງໃຊ້ພຣະທຳຂອງເຮົາເປັນຫຼັກສຳຄັນ ແລະ ບໍ່ຕ້ອງກະທຳໂດຍບໍ່ລະມັດລະວັງ. ທຸກເສັ້ນທາງທີ່ໄປສູ່ການປະຕິບັດທີ່ແທ້ຈິງສຳລັບຄຣິສຕະຈັກແມ່ນສາມາດຄົ້ນພົບເຫັນໃນພຣະທຳຂອງເຮົາ. ຜູ້ທີ່ບໍ່ປະຕິບັດຕາມພຣະທຳຂອງເຮົາແມ່ນໄດ້ລ່ວງເກີນພຣະວິນຍານຂອງເຮົາໂດຍກົງ ແລະ ເຮົາຈະທຳລາຍພວກເຂົາ. ເນື່ອງຈາກສິ່ງຕ່າງໆໄດ້ມາຮອດສະຖານະການໃນປັດຈຸບັນ, ພວກເຈົ້າບໍ່ຈຳເປັນຕ້ອງຮູ້ສຶກເສົ້າ ແລະ ເສຍໃຈຫຼາຍກ່ຽວກັບການກະທຳ ແລະ ການປະຕິບັດຂອງພວກເຈົ້າໃນອະດີດ. ຄວາມມີໃຈເອື້ອເຟື້ອເພື່ອແຜ່ຂອງເຮົາແມ່ນບໍ່ມີຂອບເຂດຄືກັບທະເລ ແລະ ທ້ອງຟ້າ. ເປັນໄປໄດ້ບໍ ທີ່ຄວາມສາມາດ ແລະ ຄວາມຮູ້ຂອງມະນຸດກ່ຽວກັບເຮົາ ແມ່ນເປັນສິ່ງທີ່ເຮົາບໍ່ຄຸ້ນເຄີຍຄືກັບຫຼັງມືຂອງເຮົາ? ມະນຸດຄົນໃດແດ່ທີ່ບໍ່ໄດ້ຢູ່ໃນກຳມືຂອງເຮົາ? ເຈົ້າຄິດວ່າ ເຮົາບໍ່ຮູ້ຫຍັງບໍກ່ຽວກັບຄວາມຍິ່ງໃຫຍ່ຂອງວຸດທິພາວະຂອງເຈົ້າ ຈົນວ່າເຮົາບໍ່ຮູ້ກ່ຽວກັບສິ່ງນີ້ຢ່າງສິ້ນເຊີງບໍ? ມັນເປັນໄປບໍ່ໄດ້! ສະນັ້ນ, ເມື່ອທຸກຄົນໝົດຫວັງທີ່ສຸດ, ເມື່ອພວກເຂົາບໍ່ສາມາດລໍຖ້າໄດ້ອີກຕໍ່ໄປ ແລະ ປາຖະໜາທີ່ຈະເລີ່ມຕົ້ນໃໝ່, ເມື່ອພວກເຂົາຕ້ອງການຖາມເຮົາວ່າ ແມ່ນຫຍັງກຳລັງເກີດຂຶ້ນ, ເມື່ອບາງຄົນເພີດເພີນກັບການຟຸມເຟືອຍ ແລະ ບາງຄົນຕ້ອງການຕໍ່ຕ້ານ, ເມື່ອບາງຄົນຍັງຈົງຮັກພັກດີໃນການບໍລິການ, ເຮົາກໍໄດ້ເລີ່ມຕົ້ນຂັ້ນຕອນທີສອງຂອງຍຸກແຫ່ງການພິພາກສາແລ້ວ: ໂດຍການຕັດສິນ ແລະ ເຮັດໃຫ້ປະຊາຊົນຂອງເຮົາບໍລິສຸດ. ນັ້ນຍັງໝາຍຄວາມວ່າ ເຮົາເລີ່ມເຝິກອົບຮົມປະຊາຊົນຂອງເຮົາຢ່າງເປັນທາງການ ໂດຍທີ່ບໍ່ພຽງແຕ່ຍອມໃຫ້ພວກເຈົ້າເປັນພະຍານຢ່າງງົດງາມໃຫ້ກັບເຮົາເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນ ແມ່ນເພື່ອໄດ້ຮັບໄຊຊະນະອັນສວຍງາມໃນການຕໍ່ສູ້ເພື່ອເຮົາຈາກບ່ອນນັ່ງຂອງປະຊາຊົນຂອງເຮົາ.

ຕະຫຼອດເວລາ, ປະຊາຊົນຂອງເຮົາຄວນເຝົ້າລະວັງຕໍ່ແຜນຮ້າຍຂອງຊາຕານ, ປົກປ້ອງປະຕູເຮືອນຂອງເຮົາເພື່ອເຮົາ; ພວກເຂົາຄວນສາມາດສະໜັບສະໜູນກັນ ແລະ ກັນ ແລະ ສະໜອງໃຫ້ກັນ ແລະ ກັນເພື່ອຫຼີກລ່ຽງການຕິດແຮ້ວຂອງຊາຕານ ເຊິ່ງໃນເວລານັ້ນ ມັນກໍຈະຊ້າເກີນໄປທີ່ຈະເສຍໃຈ. ເປັນຫຍັງເຮົາຈຶ່ງຕ້ອງເຝິກອົບຮົມພວກເຈົ້າຢ່າງຮີບດ່ວນ? ເປັນຫຍັງເຮົາຈຶ່ງບອກຄວາມຈິງແກ່ພວກເຈົ້າກ່ຽວກັບໂລກວິນຍານ? ເປັນຫຍັງເຮົາຈຶ່ງເຕືອນ ແລະ ແນະນຳພວກເຈົ້າຊໍ້າແລ້ວຊໍ້າອີກ? ພວກເຈົ້າເຄີຍຄິດກ່ຽວກັບເລື່ອງນີ້ບໍ? ການຄິດຂອງພວກເຈົ້າເຄີຍໄດ້ຮັບຄວາມຊັດເຈນບໍ? ສະນັ້ນ, ພວກເຈົ້າບໍ່ພຽງແຕ່ຈຳເປັນຕ້ອງມີຄວາມສາມາດໃນການມີປະສົບການຫຼາຍ ໂດຍການສ້າງພື້ນຖານຂອງອະດີດເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນ ແມ່ນເພື່ອຂັບໄລ່ຄວາມບໍ່ບໍລິສຸດພາຍໃນພວກເຈົ້າ ພາຍໃຕ້ການຊີ້ນຳຂອງພຣະທຳແຫ່ງປັດຈຸບັນ ໂດຍຍອມໃຫ້ພຣະທຳຂອງເຮົາແຕ່ລະຂໍ້ມີຮາກຖານ ແລະ ເຕີບໃຫຍ່ພາຍໃນຈິດໃຈຂອງເຈົ້າ ແລະ ທີ່ສຳຄັນໄປກວ່ານັ້ນ ແມ່ນເພື່ອໃຫ້ໄດ້ໝາກຜົນຫຼາຍຂຶ້ນ. ນີ້ກໍເພາະວ່າ ສິ່ງທີ່ເຮົາຂໍບໍ່ແມ່ນດອກໄມ້ທີ່ສົດໃສ ແລະ ຂຽວງາມ ແຕ່ເປັນໝາກໄມ້ທີ່ອຸດົມສົມບູນ ທີ່ບໍ່ສູນເສຍຄວາມສຸກຂອງມັນ. ພວກເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາບໍ? ເຖິງວ່າ ດອກໄມ້ໃນເຮືອນແກ້ວແມ່ນມີຫຼາຍຄືກັບດວງດາວ ແລະ ດຶງດູດຝູງຊົນທີ່ຊື່ນຊົມ ແຕ່ເມື່ອພວກມັນແຫ່ວ ພວກມັນກໍຈະຖືກ

ຈົກຂາດເປັນສິ້ນໆຄືກັບແຜນອັນຊົ່ວຮ້າຍຂອງຊາຕານ ແລະ ຈະບໍ່ມີໃຜສົນໃຈພວກມັນ. ແຕ່ສຳລັບຜູ້ທີ່ຖືກລົມພັດ ແລະ ຖືກຕາເວັນເຮັດໃຫ້ແຫ້ງຈົນກອບ ທີ່ເປັນພະຍານໃຫ້ແກ່ເຮົາ, ເຖິງວ່າ ດອກໄມ້ເຫຼົ່ານີ້ຈະບໍ່ເບິ່ງບານຢ່າງສວຍງາມ ແຕ່ພວກມັນກໍຈະມີໝາກໄມ້ ເມື່ອດອກໄມ້ແຫ່ວ ເພາະວ່າ ເຮົາຕ້ອງການໃຫ້ພວກມັນເປັນເຊັ່ນນັ້ນ. ເມື່ອເຮົາກ່າວພຣະທຳເຫຼົ່ານີ້, ພວກເຈົ້າໄດ້ເຂົ້າໃຈຫຼາຍສ່ຳໃດ? ເມື່ອດອກໄມ້ໄດ້ແຫ່ວ ແລະ ອອກໝາກ ແລະ ເມື່ອສາມາດສະໜອງໝາກໄມ້ທັງໝົດນີ້ໃຫ້ກັບຄວາມສຸກຂອງເຮົາ, ເຮົາກໍຈະຈົບສິ້ນພາລະກິດທັງໝົດຂອງເຮົາຢູ່ເທິງແຜ່ນດິນໂລກ ແລະ ຈະເລີ່ມຊື່ນຊົມແກ້ວຜະລຶກແຫ່ງສະຕິປັນຍາຂອງເຮົາ!

ວັນທີ 22 ກຸມພາ 1992

# ບົດທີ 4

ປະຊາຊົນຂອງເຮົາທຸກຄົນທີ່ຮັບໃຊ້ຢູ່ຕໍ່ໜ້າເຮົາຄວນຄິດຄືນຫຼັງເຖິງອະດີດ: ຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາແມ່ນມີຮອຍດ່າງຈາກຄວາມບໍ່ບໍລິສຸດບໍ? ຄວາມຈົງຮັກພັກດີຂອງເຈົ້າທີ່ມີຕໍ່ເຮົາບໍລິສຸດ ແລະ ດ້ວຍຄວາມເຕັມໃຈບໍ? ຄວາມຮູ້ຂອງເຈົ້າກ່ຽວກັບເຮົາແມ່ນແທ້ຈິງບໍ? ເຮົາມີຈັກຫ້ອງຢູ່ໃນຫົວໃຈຂອງພວກເຈົ້າ? ເຮົາໄດ້ເຕີມເຕັມຫົວໃຈຂອງພວກເຈົ້າທັງໝົດບໍ? ພຣະທຳຂອງເຮົາໄດ້ບັນລຸຜົນພາຍໃນພວກເຈົ້າຫຼາຍສໍ່າໃດ? ຢ່າຄິດວ່າເຮົາໂງ່! ສິ່ງເຫຼົ່ານີ້ແມ່ນຊັດເຈນສຳລັບເຮົາໝົດແລ້ວ! ປັດຈຸບັນໃນຂະນະທີ່ສຽງຂອງຄວາມລອດພົ້ນຂອງເຮົາໄດ້ດັງອອກ, ຄວາມຮັກຂອງພວກເຈົ້າທີ່ມີຕໍ່ເຮົາແມ່ນໄດ້ເພີ່ມຂຶ້ນບໍ? ມີສ່ວນໃດຂອງຄວາມຈົງຮັກພັກດີຂອງເຈົ້າທີ່ມີຕໍ່ເຮົາບໍລິສຸດບໍ? ຄວາມຮູ້ຂອງເຈົ້າກ່ຽວກັບເຮົາໄດ້ມີຄວາມເລິກເຊິ່ງບໍ? ການສັນລະເສີນທີ່ມອບໃຫ້ໃນອະດີດໄດ້ປູພື້ນຖານຢ່າງໜາແໜ້ນໃຫ້ແກ່ຄວາມຮູ້ຂອງພວກເຈົ້າໃນປັດຈຸບັນບໍ? ພຣະວິນຍານຂອງເຮົາຄອບຄອງພວກເຈົ້າຫຼາຍສໍ່າໃດ? ພາບລັກຂອງເຮົາມີຢູ່ພາຍໃນພວກເຈົ້າຈັກບ່ອນ? ພຣະວັດຈະນະຂອງເຮົາໄດ້ຕີຖືກຈຸດອ່ອນຂອງພວກເຈົ້າຢູ່ບໍ? ພວກເຈົ້າຮູ້ສຶກວ່າ ພວກເຈົ້າບໍ່ມີບ່ອນເຊື່ອງຄວາມອັບອາຍຂອງຕົວເອງແທ້ບໍ? ພວກເຈົ້າເຊື່ອວ່າ ພວກເຈົ້າບໍ່ມີຄຸນສົມບັດເປັນປະຊາຊົນຂອງເຮົາແທ້ບໍ? ຖ້າພວກເຈົ້າບໍ່ສົນໃຈຕໍ່ຄຳຖາມຂ້າງເທິງ, ແລ້ວນີ້ກໍສະແດງໃຫ້ເຫັນວ່າ ພວກເຈົ້າກຳລັງຕຶກເບັດຢູ່ນໍ້າຂຸ່ນ, ພວກເຈົ້າພຽງມີຢູ່ເພື່ອເພີ່ມຈຳນວນຄົນເທົ່ານັ້ນ ແລະ ເມື່ອເຖິງເວລາທີ່ເຮົາກຳນົດລ່ວງໜ້າ ພວກເຈົ້າກໍຈະຖືກໂຍນອອກ ແລະ ຖືກຖິ້ມລົງໃນຂຸມເລິກທີ່ສຸດເປັນຄັ້ງທີ່ສອງຢ່າງແນ່ນອນ. ສິ່ງເຫຼົ່ານີ້ແມ່ນພຣະທຳແຫ່ງການຕັກເຕືອນຂອງເຮົາ ແລະ ຜູ້ໃດທີ່ຖືເບົາກັບພຣະທຳເຫຼົ່ານີ້ຈະຖືກໂຈມຕີດ້ວຍການພິພາກສາຂອງເຮົາ ແລະ ຜະເຊີນດ້ວຍໄພພິບັດຕາມເວລາທີ່ໄດ້ກຳນົດໄວ້. ແລ້ວມັນບໍ່ແມ່ນແບບນີ້ບໍ? ເຮົາຍັງຈຳເປັນຕ້ອງຍົກຕົວຢ່າງເພື່ອອະທິບາຍສິ່ງນີ້ອີກບໍ? ເຮົາຕ້ອງເວົ້າໃຫ້ແຈ້ງຂຶ້ນກວ່ານີ້ບໍ ເພື່ອຍົກເປັນຕົວຢ່າງແກ່ພວກເຈົ້າ? ຕັ້ງແຕ່ເວລາຂອງການຊົງສ້າງຈົນເຖິງປັດຈຸບັນ, ຫຼາຍຄົນບໍ່ໄດ້ເຊື່ອຟັງພຣະທຳຂອງເຮົາ ແລະ ດ້ວຍເຫດນັ້ນ ຈຶ່ງຖືກຂັບໄລ່ ແລະ ໂຍນອອກຈາກກະແສຂອງການຟື້ນຟູຂອງເຮົາ; ໃນທີ່ສຸດຮ່າງກາຍຂອງພວກເຂົາກໍຈະດັບສູນ ແລະ ວິນຍານຂອງພວກເຂົາກໍຈະຖືກສົ່ງໄປຍັງແດນມໍລະນາ ແລະ ແມ່ນແຕ່ໃນປັດຈຸບັນ ພວກເຂົາກໍຍັງຈະຢູ່ພາຍໃຕ້ການລົງໂທດຢ່າງທຸກທໍລະມານ. ຫຼາຍຄົນໄດ້ຕິດຕາມພຣະທຳຂອງເຮົາ ແຕ່ພວກເຂົາໄດ້ຕໍ່ຕ້ານແສງສະຫວ່າງ ແລະ ແສງເຍືອງທາງຂອງເຮົາ ແລະ ດ້ວຍເຫດນັ້ນ ຈຶ່ງຖືກເຮົາເຕະອອກໄປທາງຂ້າງ ແລ້ວຕົກໄປຢູ່ພາຍໃຕ້ອຳນາດຂອງຊາຕານ ແລະ ກາຍເປັນບຸກຄົນເຫຼົ່ານັ້ນທີ່ຕໍ່ຕ້ານເຮົາ. (ໃນປັດຈຸບັນ ທຸກຄົນທີ່ຕໍ່ຕ້ານເຮົາໂດຍກົງ ແມ່ນເຊື່ອຟັງພຣະທຳຂອງເຮົາແບບຜິວເຜີນເທົ່ານັ້ນ ແລະ ບໍ່ໄດ້ເຊື່ອຟັງແກ່ນແທ້ຂອງພຣະທຳຂອງເຮົາ). ເຊັ່ນດຽວກັນ ຍັງມີຫຼາຍຄົນທີ່ຟັງແຕ່ພຣະທຳທີ່ເຮົາກ່າວໃນມື້ວານ, ຜູ້ທີ່ຍຶດຕິດຢູ່ກັບ "ຂີ້ເຫຍື້ອ" ຈາກອະດີດ ແລະ ບໍ່ເຫັນຄຸນຄ່າຂອງ "ຜົນຜະລິດ" ໃນປັດຈຸບັນ. ຜູ້ຄົນເຫຼົ່ານີ້ບໍ່ພຽງແຕ່ຖືກຊາຕານຈັບກຸມຕົວເທົ່ານັ້ນ ແຕ່ໄດ້ກາຍເປັນຄົນບາບຕະຫຼອດການ ແລະ ກາຍເປັນສັດຕູຂອງເຮົາ ແລະ ພວກເຂົາແມ່ນຕໍ່ຕ້ານເຮົາໂດຍກົງ.

ຜູ້ຄົນດັ່ງກ່າວແມ່ນເປົ້າໝາຍຂອງການພິພາກສາໃນຂັ້ນດຸເດືອດແຫ່ງການໂກດຮ້າຍຂອງເຮົາ ແລະ ໃນປັດຈຸບັນ ພວກເຂົາຍັງຕາບອດຢູ່, ຍັງຢູ່ໃນຄຸກມືດໃຕ້ດິນ (ໝາຍຄວາມວ່າ ຜູ້ຄົນດັ່ງກ່າວແມ່ນເນົ່າເປື່ອຍ, ເປັນຊາກສົບທີ່ບໍ່ມີຄວາມຮູ້ສຶກ ທີ່ຖືກຄວບຄຸມໂດຍຊາຕານ; ຍ້ອນດວງຕາຂອງພວກເຂົາຖືກເຮົາປິດບັງ ເຮົາຈຶ່ງເວົ້າວ່າ ພວກເຂົາຕາບອດ). ມັນຈະເປັນການດີທີ່ຈະຍົກຕົວຢ່າງເພື່ອເປັນບ່ອນອ້າງອີງໃຫ້ແກ່ພວກເຈົ້າ ເພື່ອວ່າ ພວກເຈົ້າຈະສາມາດຮຽນຮູ້ຈາກມັນ:

ເມື່ອກ່າວເຖິງໂປໂລ, ພວກເຈົ້າຈະຄິດເຖິງປະຫວັດຂອງລາວ ແລະ ບາງເລື່ອງກ່ຽວກັບລາວທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງ. ລາວຖືກສອນໂດຍພໍ່ແມ່ຂອງລາວແຕ່ອາຍຸຍັງນ້ອຍ ແລະ ໄດ້ຮັບຊີວິດຂອງເຮົາ ແລະ ເນື່ອງຈາກການກຳນົດລ່ວງໜ້າຂອງເຮົາ ລາວຈຶ່ງມີຄວາມສາມາດທີ່ເຮົາຕ້ອງການ. ຕອນອາຍຸ 19 ປີ, ລາວໄດ້ອ່ານໜັງສືຫຼາຍເຫຼັ້ມກ່ຽວກັບຊີວິດ; ດ້ວຍເຫດນັ້ນ ເຮົາຈຶ່ງບໍ່ຈຳເປັນຕ້ອງເຂົ້າສູ່ລາຍລະອຽດ ກ່ຽວກັບວິທີທີ່ລາວບໍ່ພຽງແຕ່ສາມາດເວົ້າດ້ວຍຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບເລື່ອງຝ່າຍວິນຍານ ແຕ່ຍັງສາມາດເຂົ້າໃຈເຈດຕະນາຂອງເຮົາອີກດ້ວຍ ນັ້ນກໍຍ້ອນຄວາມສາມາດຂອງລາວ ແລະ ຍ້ອນແສງສະຫວ່າງ ແລະ ແສງເຍືອງທາງຂອງເຮົາ. ແນ່ນອນ ນີ້ບໍ່ໄດ້ຍົກເວັ້ນປັດໄຈທີ່ປະກອບທັງພາຍໃນ ແລະ ພາຍນອກ. ຢ່າງໃດກໍຕາມ, ຄວາມບົກຜ່ອງຂອງລາວກໍຄືຍ້ອນພອນສະຫວັນຂອງລາວ ລາວຈຶ່ງມັກເວົ້າໂອ້ຫານ ແລະ ໂອ້ອວດ. ຜົນຕາມມາກໍຄື, ເນື່ອງຈາກຄວາມບໍ່ເຊື່ອຟັງຂອງລາວ ເຊິ່ງບາງສ່ວນແມ່ນເປັນຕົວແທນໃຫ້ແກ່ເທວະທູດໂດຍກົງ, ເມື່ອເຮົາກາຍເປັນເນື້ອໜັງເປັນຄັ້ງທຳອິດ ລາວຈຶ່ງໃຊ້ທຸກຄວາມພະຍາຍາມເພື່ອຕໍ່ຕ້ານເຮົາ. ລາວແມ່ນໜຶ່ງໃນບັນດາຜູ້ຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພຣະທຳຂອງເຮົາ ແລະ ຫ້ອງວ່າງສຳລັບເຮົາໃນຫົວໃຈຂອງລາວແມ່ນໄດ້ຫາຍໄປແລ້ວ. ຜູ້ຄົນດັ່ງກ່າວຕໍ່ຕ້ານຄວາມເປັນພຣະເຈົ້າຂອງເຮົາ ໂດຍກົງ ແລະ ຖືກເຮົາໂຈມຕີ ແລະ ໃນທີ່ສຸດກໍໄດ້ແຕ່ກົ້ມຂາບລົງ ແລະ ສາລະພາບບາບຂອງພວກເຂົາເທົ່ານັ້ນ. ສະນັ້ນ, ພາຍຫຼັງທີ່ເຮົາໄດ້ໃຊ້ຈຸດແຂງຂອງລາວ ເຊິ່ງໝາຍຄວາມວ່າ ຫຼັງຈາກທີ່ລາວໄດ້ເຮັດພາລະກິດໃຫ້ເຮົາໃນໄລຍະເວລາໃດໜຶ່ງລາວກໍກັບໄປສູ່ວິທີທາງເກົ່າຂອງລາວອີກຄັ້ງ ແລະ ເຖິງແມ່ນວ່າ ລາວບໍ່ໄດ້ເປັນຄົນທີ່ບໍ່ເຊື່ອຟັງພຣະທຳຂອງເຮົາໂດຍກົງ ແຕ່ລາວກໍບໍ່ໄດ້ເຊື່ອຟັງການຊີ້ນຳພາຍໃນ ແລະ ແສງສະຫວ່າງຂອງເຮົາ ແລະ ດ້ວຍເຫດນັ້ນ ທຸກສິ່ງທີ່ລາວໄດ້ເຮັດໃນອະດີດຈຶ່ງບໍ່ມີປະໂຫຍດຫຍັງ; ເວົ້າອີກຢ່າງໜຶ່ງກໍຄື ມົງກຸດແຫ່ງຄວາມສະຫງ່າລາສີທີ່ລາວເວົ້າເຖິງແມ່ນໄດ້ກາຍເປັນຄຳເວົ້າທີ່ວ່າງເປົ່າ ແລະ ເປັນຜົນຜະລິດຈາກຈິນຕະນາການຂອງລາວເອງ ເນື່ອງຈາກວ່າ ແມ່ນແຕ່ໃນປັດຈຸບັນລາວກໍຍັງຢູ່ພາຍໃຕ້ການພິພາກສາພາຍໃນຂອບເຂດຂໍ້ຜູກມັດຂອງເຮົາ.

ຈາກຕົວຢ່າງຂ້າງເທິງ ສາມາດເຫັນໄດ້ວ່າ ໃຜກໍຕາມທີ່ຕໍ່ຕ້ານເຮົາ (ໂດຍບໍ່ພຽງແຕ່ຕໍ່ຕ້ານຕົວຕົນຂອງເຮົາທີ່ເປັນເນື້ອໜັງເທົ່ານັ້ນ ແຕ່ສຳຄັນໄປກວ່ານັ້ນ ແມ່ນຕໍ່ຕ້ານພຣະທຳ ແລະ ພຣະວິນຍານຂອງເຮົາ ນັ້ນກໍຄື ຄວາມເປັນພຣະເຈົ້າຂອງເຮົາ) ແມ່ນໄດ້ຮັບການພິພາກສາຈາກເຮົາໃນເນື້ອໜັງຂອງພວກເຂົາ. ເມື່ອພຣະວິນຍານຂອງເຮົາອອກຈາກເຈົ້າ, ເຈົ້າກໍຕົກຕ່ຳລົງສູ່ແດນມໍລະນາໂດຍກົງ. ເຖິງແມ່ນວ່າ ຮ່າງກາຍທີ່ເປັນເນື້ອໜັງຂອງເຈົ້າແມ່ນຢູ່ເທິງແຜ່ນດິນໂລກ, ເຈົ້າກໍຄືກັບບາງຄົນທີ່ທົນທຸກ

ຈາກອາການເຈັບປ່ວຍທາງຈິດ: ເຈົ້າໄດ້ສູນເສຍເຫດຜົນຂອງເຈົ້າ ແລະ ຮູ້ສຶກທັນທີ ຄືກັບວ່າ ເຈົ້າເປັນຊາກສົບ ຈົນເຈົ້າຕ້ອງໄດ້ອ້ອນວອນໃຫ້ເຮົາກຳຈັດເນື້ອໜັງຂອງເຈົ້າໂດຍໄວ. ພວກເຈົ້າສ່ວນຫຼາຍທີ່ມີຈິດວິນານແມ່ນມີຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ສະຖານະການເຫຼົ່ານີ້ ແລະ ເຮົາບໍ່ຈຳເປັນຕ້ອງເຂົ້າສູ່ລາຍລະອຽດເພີ່ມເຕີມອີກ. ໃນອະດີດ, ເມື່ອເຮົາປະຕິບັດພາລະກິດໃນຄວາມເປັນມະນຸດທຳມະດາ, ຜູ້ຄົນສ່ວນໃຫຍ່ແມ່ນໄດ້ປະເມີນພວກເຂົາເອງຕໍ່ຄວາມໂກດຮ້າຍ ແລະ ລິດທານຸພາບຂອງເຮົາ ແລະ ໄດ້ຮູ້ຈັກກ່ຽວກັບສະຕິປັນຍາ ແລະ ອຸປະນິໄສຂອງເຮົາເລັກນ້ອຍແລ້ວ. ໃນປັດຈຸບັນ, ເຮົາເວົ້າ ແລະ ກະທຳໃນຄວາມເປັນພຣະເຈົ້າໂດຍກົງ ແລະ ຍັງມີບາງຄົນທີ່ຈະເຫັນຄວາມໂກດຮ້າຍ ແລະ ການພິພາກສາຂອງເຮົາດ້ວຍສາຍຕາຂອງພວກເຂົາເອງ; ຍິ່ງໄປກວ່ານັ້ນ, ພາລະກິດຫຼັກໃນຂັ້ນຕອນທີສອງຂອງຍຸກແຫ່ງການພິພາກສາ ແມ່ນເພື່ອເຮັດໃຫ້ປະຊາຊົນຂອງເຮົາທຸກຄົນຮູ້ຈັກການກະທຳຂອງເຮົາໃນເນື້ອໜັງໂດຍກົງ ແລະ ເພື່ອເຮັດໃຫ້ພວກເຈົ້າທຸກຄົນເຫັນອຸປະນິໄສຂອງເຮົາໂດຍກົງ. ແຕ່ຍ້ອນວ່າເຮົາຢູ່ໃນເນື້ອໜັງ, ເຮົາຈຶ່ງໃສ່ໃຈຄວາມອ່ອນແອຂອງພວກເຈົ້າ. ຄວາມຫວັງຂອງເຮົາກໍຄື ພວກເຈົ້າຈະບໍ່ປະຕິບັດຕໍ່ຈິດໃຈ, ຈິດວິນຍານ ແລະ ຮ່າງກາຍຂອງພວກເຈົ້າຄືຂອງຫຼິ້ນ ໂດຍອຸທິດສິ່ງເຫຼົ່ານັ້ນໃຫ້ກັບຊາຕານຢ່າງບໍ່ຄິດ. ມັນດີກວ່າ ທີ່ຈະຖະໜອມທຸກສິ່ງທີ່ພວກເຈົ້າມີ ແລະ ບໍ່ໃຫ້ປະຕິບັດຕໍ່ມັນເປັນຄືກັບເກມ ເນື່ອງຈາກສິ່ງດັ່ງກ່າວນີ້ແມ່ນກ່ຽວພັນກັບຊະຕາກຳຂອງພວກເຈົ້າ. ພວກເຈົ້າສາມາດເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາແທ້ບໍ? ພວກເຈົ້າສາມາດໃສ່ໃຈຄວາມຮູ້ສຶກທີ່ແທ້ຈິງຂອງເຮົາແທ້ບໍ?

ພວກເຈົ້າເຕັມໃຈຮັບເອົາພອນຂອງເຮົາຢູ່ເທິງແຜ່ນດິນໂລກບໍ ເຊິ່ງເປັນພອນດຽວກັນກັບພອນໃນສະຫວັນ? ພວກເຈົ້າເຕັມໃຈທີ່ຈະຖະໜອມຄວາມເຂົ້າໃຈກ່ຽວກັບເຮົາ, ຄວາມສຸກຈາກພຣະທຳຂອງເຮົາ ແລະ ຄວາມຮູ້ກ່ຽວກັບເຮົາດັ່ງສິ່ງທີ່ມີຄ່າ ແລະ ມີຄວາມໝາຍທີ່ສຸດໃນຊີວິດຂອງພວກເຈົ້າບໍ? ພວກເຈົ້າສາມາດອ່ອນນ້ອມຕໍ່ເຮົາຢ່າງສົມບູນໄດ້ຢ່າງແທ້ຈິງບໍ ໂດຍທີ່ບໍ່ຄິດໃສ່ຄວາມຄາດຫວັງຂອງພວກເຈົ້າເອງ? ພວກເຈົ້າສາມາດຍອມໃຫ້ຕົວເອງຖືກເຮົາເຮັດໃຫ້ຕາຍ ແລະ ຖືກເຮົານຳພາຄືກັນກັບໂຕແກະໄດ້ແທ້ບໍ? ມີໃຜແດ່ໃນບັນດາພວກເຈົ້າທີ່ສາມາດເຮັດສຳເລັດສິ່ງດັ່ງກ່າວນີ້ໄດ້? ເປັນໄປໄດ້ບໍ ທີ່ທຸກຄົນຖືກເຮົາຮັບເອົາ ແລະ ໄດ້ຮັບຄຳໝັ້ນສັນຍາຈາກເຮົາ ແມ່ນຜູ້ທີ່ໄດ້ຮັບພອນຂອງເຮົາ? ພວກເຈົ້າໄດ້ເຂົ້າໃຈຫຍັງບໍຈາກພຣະທຳເຫຼົ່ານີ້? ຖ້າເຮົາທົດສອບພວກເຈົ້າ, ພວກເຈົ້າຈະສາມາດເອົາພວກເຈົ້າເອງໄປຢູ່ໃນການປັ້ນແຕ່ງຂອງເຮົາໄດ້ບໍ ແລະ ໃນທ່າມກາງຂອງການທົດລອງເຫຼົ່ານີ້ ພວກເຈົ້າຈະສາມາດຄົ້ນຫາຈຸດປະສົງ ແລະ ເຂົ້າໃຈຫົວໃຈຂອງເຮົາໄດ້ບໍ? ເຮົາບໍ່ໄດ້ຕ້ອງການໃຫ້ເຈົ້າສາມາດເວົ້າດ້ວຍຄຳເວົ້າທີ່ປະທັບໃຈ ຫຼື ເລົ່າເລື່ອງຕ່າງໆທີ່ໜ້າຕື່ນເຕັ້ນ; ກົງກັນຂ້າມ, ເຮົາຮຽກຮ້ອງໃຫ້ເຈົ້າສາມາດເປັນພະຍານທີ່ດີໃຫ້ແກ່ເຮົາ ແລະ ເພື່ອວ່າ ເຈົ້າຈະໄດ້ເຂົ້າສູ່ຄວາມເປັນຈິງຢ່າງສົມບູນ ແລະ ຢ່າງເລິກເຊິ່ງ. ຖ້າເຮົາບໍ່ເວົ້າໂດຍກົງ ແລ້ວເຈົ້າຈະສາມາດປະຖິ້ມທຸກຢ່າງທີ່ຢູ່ອ້ອມຂ້າງເຈົ້າ ແລະ ຍອມໃຫ້ເຮົາໃຊ້ເຈົ້າຢູ່ບໍ? ນີ້ບໍ່ແມ່ນຄວາມເປັນຈິງທີ່ເຮົາຕ້ອງການບໍ? ໃຜສາມາດເຂົ້າໃຈຄວາມໝາຍໃນພຣະທຳຂອງເຮົາແດ່? ເຖິງຢ່າງໃດກໍຕາມ ເຮົາຮຽກຮ້ອງບໍ່ໃຫ້ພວກເຈົ້າຊັ່ງຊາດ້ວຍຄວາມສົງໄສ

ອີກຕໍ່ໄປ ແລະ ຂໍໃຫ້ພວກເຈົ້າເອົາໃຈໃສ່ໃນການເຂົ້າສູ່ຂອງພວກເຈົ້າ ແລະ ເຂົ້າໃຈແກ່ນແທ້ຂອງພຣະທຳຂອງເຮົາ. ສິ່ງນີ້ຈະປ້ອງກັນບໍ່ໃຫ້ເຈົ້າເຂົ້າໃຈພຣະທຳຂອງເຮົາຜິດ ແລະ ບໍ່ໃຫ້ມີຄວາມບໍ່ຊັດເຈນຕໍ່ຄວາມໝາຍຂອງເຮົາ ເຊິ່ງມັນຈະເຮັດໃຫ້ເຈົ້າລະເມີດຕໍ່ບົດບັນຍັດແຫ່ງການປົກຄອງຂອງເຮົາ. ເຮົາຫວັງວ່າ ພວກເຈົ້າຈະເຂົ້າໃຈເຈດຕະນາໃນພຣະທຳຂອງເຮົາສຳລັບພວກເຈົ້າ. ບໍ່ໃຫ້ຄິດເຖິງຄວາມຄາດຫວັງຂອງພວກເຈົ້າເອງອີກຕໍ່ໄປ ແລະ ຈົ່ງປະຕິບັດຕາມທີ່ພວກເຈົ້າໄດ້ຕັ້ງໝັ້ນຢູ່ຕໍ່ໜ້າເຮົາເພື່ອຍອມຮັບເອົາການປັ້ນແຕ່ງຂອງພຣະເຈົ້າໃນທຸກສິ່ງ. ທຸກຄົນທີ່ຢືນຢູ່ພາຍໃນຄົວເຮືອນຂອງເຮົາຄວນເຮັດເທົ່າທີ່ພວກເຂົາສາມາດເຮັດໄດ້; ເຈົ້າຄວນຖວາຍສິ່ງທີ່ດີທີ່ສຸດຂອງເຈົ້າເອງໃຫ້ແກ່ຂັ້ນຕອນສຸດທ້າຍຂອງພາລະກິດຂອງເຮົາຢູ່ເທິງແຜ່ນດິນໂລກ. ເຈົ້າເຕັມໃຈທີ່ຈະນຳເອົາສິ່ງດັ່ງກ່າວໄປປະຕິບັດຢ່າງແທ້ຈິງບໍ?

ວັນທີ 23 ກຸມພາ 1992

# ບົດທີ 5

ສຽງແຫ່ງພຣະວິນຍານຂອງເຮົາແມ່ນການສະແດງອອກຂອງອຸປະນິໄສທັງໝົດຂອງເຮົາ. ພວກເຈົ້າເຂົ້າໃຈບໍ? ການທີ່ບໍ່ຊັດເຈນໃນຈຸດນີ້ກໍເທົ່າກັບການຕໍ່ຕ້ານເຮົາໂດຍກົງ. ພວກເຈົ້າໄດ້ເຫັນເຖິງຄວາມສຳຄັນທີ່ນອນຢູ່ໃນນີ້ຢ່າງແທ້ຈິງບໍ? ພວກເຈົ້າຮູ້ຈັກແທ້ບໍວ່າເຮົາໄດ້ໃຊ້ຄວາມພະຍາຍາມ ແລະ ກຳລັງຫຼາຍສໍ່າໃດກັບພວກເຈົ້າ? ພວກເຈົ້າກ້າເປີດເຜີຍສິ່ງທີ່ພວກເຈົ້າໄດ້ກະທຳ ແລະ ວິທີທີ່ພວກເຈົ້າປະພຶດຕໍ່ໜ້າເຮົາບໍ? ແລ້ວພວກເຈົ້າບັງອາດເອີ້ນຕົນເອງວ່າເປັນປະຊາຊົນຂອງເຮົາເມື່ອຢູ່ຕໍ່ໜ້າເຮົາ, ພວກເຈົ້າບໍ່ມີຢາງອາຍ, ແຮງໄກທີ່ຈະມີຄວາມຮູ້ສຶກ! ບໍ່ໄວກໍຊ້າ ຄົນແບບພວກເຈົ້າຈະຖືກໂຍນອອກຈາກເຮືອນຂອງເຮົາ! ຢ່າໃຊ້ປະສົບການຂອງພວກເຈົ້າເພື່ອຫຼອກລວງເຮົາ ໂດຍເຮັດທຳທ່າວ່າພວກເຈົ້າໄດ້ຢືນເປັນພະຍານໃຫ້ແກ່ເຮົາ! ນີ້ແມ່ນສິ່ງທີ່ມະນຸດຊາດສາມາດເຮັດໄດ້ບໍ? ຖ້າບໍ່ມີຫຍັງຢູ່ໃນເຈດຕະນາຂອງເຈົ້າ ແລະ ເປົ້າໝາຍຂອງເຈົ້າ, ເຈົ້າກໍຄົງຈະຍ່າງໃນເສັ້ນທາງອື່ນຕັ້ງແຕ່ດົນແລ້ວ. ເຈົ້າຄິດວ່າເຮົາບໍ່ຮູ້ບໍວ່າຫົວໃຈຂອງມະນຸດສາມາດແບກຮັບໄດ້ຫຼາຍສໍ່າໃດ? ຕັ້ງແຕ່ເວລານີ້ເປັນຕົ້ນໄປ, ໃນບັນດາທຸກສິ່ງ, ເຈົ້າຕ້ອງເຂົ້າສູ່ຄວາມເປັນຈິງແຫ່ງການປະຕິບັດ; ຖ້າມີແຕ່ເວົ້າເລື້ອຍເປື່ອຍຄືກັບທີ່ເຈົ້າໄດ້ເຮັດໃນອະດີດ, ມັນຈະບໍ່ພາໃຫ້ເຈົ້າໄປຮອດໃສເລີຍ. ໃນອະດີດ, ພວກເຈົ້າສ່ວນຫຼາຍແມ່ນສາມາດເອົາປຽບຜູ້ອື່ນພາຍໃຕ້ຫຼັງຄາຂອງເຮົາ; ຄວາມຈິງທີ່ເຮັດໃຫ້ພວກເຈົ້າສາມາດຍຶດໝັ້ນໄດ້ໃນປັດຈຸບັນກໍເນື່ອງຈາກຄວາມຮຸນແຮງຂອງພຣະທຳຂອງເຮົາທັງສິ້ນ. ເຈົ້າຄິດວ່າເຮົາເວົ້າເລື້ອຍເປື່ອຍ ແລະ ບໍ່ມີຈຸດປະສົງບໍ? ເປັນໄປບໍ່ໄດ້! ເຮົາຫຼຽວລົງເບິ່ງທຸກສິ່ງຈາກເບື້ອງສູງ ແລະ ໃຊ້ອຳນາດເໜືອທຸກສິ່ງຈາກເບື້ອງສູງ. ໃນລັກສະນະດຽວກັນ, ເຮົາໄດ້ວາງຄວາມລອດພົ້ນຂອງເຮົາເທິງແຜ່ນດິນໂລກ. ບໍ່ເຄີຍມີຊ່ວງເວລາໃດທີ່ເຮົາບໍ່ໄດ້ຫຼຽວເບິ່ງການກະທຳທຸກຢ່າງຂອງມະນຸດ ແລະ ທຸກສິ່ງທີ່ພວກເຂົາເວົ້າ ແລະ ກະທຳ ຈາກບ່ອນລັບຂອງເຮົາ. ສຳລັບເຮົາແລ້ວ, ມະນຸດເປັນຄືປຶ້ມທີ່ເປີດອອກ: ເຮົາເຫັນ ແລະ ຮູ້ພວກເຂົາແຕ່ລະຄົນ ແລະ ໝົດທຸກຄົນ. ບ່ອນລັບຂອງເຮົາແມ່ນບ່ອນດຳລົງຢູ່ຂອງເຮົາ ແລະ ຫຼັງຄາກົ່ງທັງໝົດໃນສະຫວັນແມ່ນຕຽງທີ່ເຮົານອນ. ກອງກຳລັງຂອງຊາຕານບໍ່ສາມາດມາເຖິງເຮົາໄດ້, ຍ້ອນເຮົາເຕັມລົ້ນດ້ວຍເດຊານຸພາບ, ຄວາມຊອບທຳ ແລະ ການພິພາກສາ. ຄວາມເລິກລັບທີ່ບໍ່ສາມາດພັນລະນາໄດ້ກໍມີຢູ່ໃນພຣະທຳຂອງເຮົາ. ເມື່ອເຮົາກ່າວ, ພວກເຈົ້າກໍກາຍເປັນຄືກັບສັດມີປີກທີ່ຫາກໍ່ຖືກໂຍນລົງນໍ້າ, ເຕັມໄປດ້ວຍຄວາມສັບສົນ ຫຼື ຄືກັບເດັກນ້ອຍທີ່ຫາກໍ່ຕົກໃຈຢ້ານ, ເບິ່ງຄືບໍ່ຮູ້ຈັກຫຍັງ, ຍ້ອນວິນຍານຂອງພວກເຈົ້າໄດ້ຕົກລົງສູ່ສະພາວະມືດມົວ. ເປັນຫຍັງເຮົາຈຶ່ງເວົ້າວ່າບ່ອນລັບແມ່ນບ່ອນດຳລົງຢູ່ຂອງເຮົາ? ເຈົ້າຮູ້ຄວາມໝາຍທີ່ເລິກເຊິ່ງຂອງພຣະທຳຂອງເຮົາບໍ? ຜູ້ໃດທ່າມກາງມະນຸດທີ່ສາມາດຮູ້ຈັກເຮົາໄດ້? ຜູ້ໃດສາມາດຮູ້ຈັກເຮົາດັ່ງທີ່ພວກເຂົາຮູ້ຈັກພໍ່ ແລະ ແມ່ຂອງພວກເຂົາເອງບໍ? ເມື່ອພັກຜ່ອນຢູ່ໃນເຮືອນຂອງເຮົາ, ເຮົາໄດ້ສັງເກດທຸກສິ່ງຢ່າງໃກ້ຊິດ: ທຸກຄົນເທິງແຜ່ນດິນໂລກແມ່ນວຸ້ນວາຍກັບ "ການເດີນທາງໄປທົ່ວແຜ່ນດິນໂລກ" ແລະ ຟ້າວໄປໆມາໆລ້ວນແລ້ວແຕ່ຍ້ອນເຫັນແກ່ໂຊກຊະຕາຂອງພວກເຂົາ ແລະ ອະນາຄົດຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ບໍ່ມີຜູ້ໃດເລີຍທີ່ມີກຳລັງເຫຼືອໄວ້

ສຳລັບການສ້າງອານາຈັກຂອງເຮົາ, ບໍ່ມີແມ່ນແຕ່ຄວາມພະຍາຍາມທີ່ຈະຫາຍໃຈ. ເຮົາສ້າງມະນຸດ ແລະ ເຮົາໄດ້ຊ່ວຍເຫຼືອພວກເຂົາຈາກຄວາມລຳບາກຍາກແຄ້ນເປັນເວລາຫຼາຍຄັ້ງ; ເຖິງຢ່າງນັ້ນກໍຕາມ ມະນຸດເຫຼົ່ານີ້ກໍຍັງເປັນຄົນເນລະຄຸນທັງໝົດ: ບໍ່ມີແມ່ນແຕ່ຄົນດຽວໃນທ່າມກາງພວກເຂົາທີ່ສາມາດ ນັບທຸກກຳລະນີທີ່ກ່ຽວກັບຄວາມລອດພົ້ນຂອງເຮົາ. ມັນເປັນເວລາຫຼາຍປີ, ຫຼາຍສັດຕະວັດ, ຕັ້ງແຕ່ ການເນລະມິດສ້າງໂລກມາຈົນເຖິງປັດຈຸບັນ; ເຮົາໄດ້ປະຕິບັດສິ່ງອັດສະຈັນຫຼາຍຢ່າງ ແລະ ເຮັດໃຫ້ ສະຕິປັນຍາຂອງເຮົາເປັນທີ່ຊັດແຈ້ງຫຼາຍຄັ້ງ. ເຖິງຢ່າງນັ້ນກໍຕາມ, ມະນຸດກໍຍັງເປັນບ້າ ແລະ ຕາຍດ້ານ ຄືກັບຄົນທີ່ປ່ອຍທາງຈິດ ແລະ ແມ່ນແຕ່ບາງຄັ້ງກໍຄືກັບສັດປ່າທີ່ແລ່ນໂຊເຊໃນປ່າໄມ້, ໂດຍບໍ່ມີ ເຈດຕະນາທີ່ຈະສົນໃຈໃນກິດຈະການຂອງເຮົາແມ່ນແຕ່ໜ້ອຍດຽວ. ເປັນເວລາຫຼາຍຄັ້ງ, ເຮົາໄດ້ ລົງໂທດປະຫານຊີວິດແກ່ມະນຸດ ແລະ ຕັດສິນລົງໂທດໃຫ້ພວກເຂົາຕາຍ, ແຕ່ແຜນການຄຸ້ມຄອງຂອງ ເຮົາແມ່ນບໍ່ສາມາດຖືກປ່ຽນແປງໂດຍຄົນໃດຄົນໜຶ່ງໄດ້. ແລ້ວດ້ວຍເຫດນັ້ນ, ໃນມືຂອງເຮົາ, ມະນຸດ ຈຶ່ງສືບຕໍ່ເປີດເຜີຍສິ່ງເດີມໆທີ່ພວກເຂົາຍຶດຕິດຢູ່. ຍ້ອນຂັ້ນຕອນແຫ່ງພາລະກິດຂອງເຮົາ, ເຮົາຈຶ່ງໄດ້ ຊ່ວຍເຫຼືອພວກເຈົ້າອີກຄັ້ງ ເຊິ່ງເປັນຄົນທີ່ເກີດໃນຄອບຄົວໃຫຍ່ທີ່ເສື່ອມໂຊມ, ຊົ່ວຊ້າ, ສົກກະປົກ ແລະ ໜ້າລັງກຽດ.

ພາລະກິດທີ່ຖືກວາງແຜນໄວ້ແລ້ວຂອງເຮົາຈະກ້າວໄປຂ້າງໜ້າໂດຍບໍ່ມີການຢຸດເຊົາແມ່ນແຕ່ ຊ່ວງເວລາດຽວ. ເມື່ອໄດ້ຍັບເຂົ້າສູ່ຍຸກແຫ່ງອານາຈັກ ແລະ ເມື່ອໄດ້ແບກພວກເຈົ້າເຂົ້າສູ່ອານາຈັກ ຂອງເຮົາດັ່ງປະຊາຊົນຂອງເຮົາ, ເຮົາຈະຮຽກຮ້ອງຢ່າງອື່ນຈາກພວກເຈົ້າ; ນັ້ນໝາຍຄວາມວ່າ ເຮົາຈະ ເລີ່ມປະກາດນຳໃຊ້ລັດຖະທຳມະນູນທີ່ເຮົາຈະປົກຄອງຍຸກນີ້ຕໍ່ໜ້າພວກເຈົ້າ:

ຍ້ອນພວກເຈົ້າຖືກເອີ້ນວ່າປະຊາຊົນຂອງເຮົາ, ພວກເຈົ້າກໍຄວນສາມາດສັນລະເສີນນາມຂອງ ເຮົາ; ນັ້ນກໍຄື ຢືນເປັນພະຍານໃນທ່າມກາງການທົດລອງ. ຖ້າຜູ້ໃດກໍຕາມພະຍາຍາມລໍ້ລວງເຮົາ ແລະ ປິດບັງຄວາມຈິງຈາກເຮົາ ຫຼື ເຂົ້າຮ່ວມເຮັດສິ່ງທີ່ບໍ່ໜ້າເຊື່ອຖືລັບຫຼັງຂອງເຮົາ, ຄົນປະເພດດັ່ງກ່າວຈະ ຖືກໂຍນອອກໄປ ແລະ ກຳຈັດອອກຈາກເຮືອນຂອງເຮົາ ໂດຍບໍ່ມີການຍົກເວັ້ນ ເພື່ອລໍຖ້າໃຫ້ເຮົາ ຈັດການພວກເຂົາ. ຄົນທີ່ບໍ່ຊື່ສັດ ແລະ ອົກກະຕັນຍູຕໍ່ເຮົາໃນອະດີດ ແລະ ຄົນທີ່ລຸກຂຶ້ນເພື່ອຕັດສິນ ເຮົາຢ່າງເປີດເຜີຍໃນປັດຈຸບັນ, ພວກເຂົາກໍຈະຖືກໂຍນອອກຈາກເຮືອນຂອງເຮົາເຊັ່ນກັນ. ຄົນທີ່ເປັນ ປະຊາຊົນຂອງເຮົາຕ້ອງຄຳນຶງເຖິງພາລະຂອງເຮົາພ້ອມກັບສະແຫວງຫາເພື່ອຮູ້ຈັກພຣະທຳຂອງເຮົາຢູ່ ສະເໝີ. ມີແຕ່ຄົນໃນລັກສະນະນີ້ເທົ່ານັ້ນ ເຮົາຈຶ່ງຈະໃຫ້ແສງສະຫວ່າງ ແລະ ພວກເຂົາກໍຈະໄດ້ດຳລົງ ຊີວິດຢູ່ພາຍໃຕ້ການນຳພາ ແລະ ແສງສະຫວ່າງຂອງເຮົາຢ່າງແນ່ນອນ ໂດຍບໍ່ພົບກັບການຂ້ຽນຕີເລີຍ. ຄົນທີ່ໃສ່ໃຈແຕ່ການວາງແຜນເພື່ອອະນາຄົດຂອງພວກເຂົາເອງ ໂດຍບໍ່ຄຳນຶງເຖິງພາລະຂອງເຮົາ ນັ້ນ ກໍຄື ຄົນທີ່ບໍ່ໄດ້ຕັ້ງໃຈເຮັດໃຫ້ເຮົາພໍໃຈດ້ວຍການກະທຳຂອງພວກເຂົາ, ແຕ່ກົງກັນຂ້າມ ພວກເຂົາ ສະແຫວງຫາແຕ່ສິ່ງໃຫ້ທານ, ເຮົາປະຕິເສດທີ່ຈະໃຊ້ສິ່ງມີຊີວິດດັ່ງຄົນຂໍທານເຫຼົ່ານີ້ຢ່າງແນ່ນອນ, ເພາະ ຕັ້ງແຕ່ເວລາທີ່ພວກເຂົາເກີດ ພວກເຂົາບໍ່ຮູ້ເລີຍວ່າການຄຳນຶງເຖິງພາລະຂອງເຮົາໝາຍເຖິງຫຍັງ. ພວກເຂົາເປັນຄົນທີ່ຂາດຄວາມຮູ້ສຶກປົກກະຕິ; ຄົນປະເພດດັ່ງກ່າວກຳລັງທົນທຸກຈາກ "ການຂາດສານ

ອາຫານ” ຂອງສະໝອງ ແລະ ຈຳເປັນຕ້ອງກັບເມືອເຮືອນເພື່ອ “ບຳລຸງ” ສະໝອງຂອງພວກເຂົາ. ເຮົາບໍ່ນຳໃຊ້ຄົນປະເພດດັ່ງກ່າວ. ໃນບັນດາປະຊາຊົນຂອງເຮົາ, ທຸກຄົນຈຳເປັນຕ້ອງຄຳນຶງວ່າການຮູ້ຈັກເຮົາຄືໜ້າທີ່ໆຈຳເປັນຕ້ອງປະຕິບັດຕະຫຼອດຈົນເຖິງທີ່ສຸດ, ຄືກັບການກິນ, ການນຸ່ງຫົ່ມ ແລະ ການນອນ, ເຊິ່ງເປັນສິ່ງທີ່ມະນຸດບໍ່ເຄີຍລືມທີ່ຈະເຮັດແມ່ນແຕ່ຊ່ວງເວລາດຽວ, ເພື່ອວ່າໃນທີ່ສຸດແລ້ວ ການຮູ້ຈັກເຮົາຈະກາຍເປັນສິ່ງທີ່ຄຸ້ນເຄີຍຄືກັບການກິນ, ສິ່ງທີ່ເຈົ້າເຮັດເປັນປະຈຳ ໂດຍບໍ່ຈຳເປັນໃຊ້ຄວາມພະຍາຍາມ. ແຕ່ສຳລັບພຣະທຳທີ່ເຮົາກ່າວ, ພຣະທຳທຸກຂໍ້ຕ້ອງຖືກປະຕິບັດດ້ວຍຄວາມເຊື່ອສູງສຸດ ແລະ ຖືກຮັບເອົາຢ່າງສົມບູນ; ບໍ່ສາມາດປະຕິບັດແບບພໍເປັນພິທີ. ຜູ້ໃດທີ່ບໍ່ໃສ່ໃຈຕໍ່ພຣະທຳຂອງເຮົາກໍຈະຖືວ່າກຳລັງຕໍ່ຕ້ານເຮົາໂດຍກົງ; ຜູ້ໃດທີ່ບໍ່ກິນຈາກພຣະທຳຂອງເຮົາ ຫຼື ບໍ່ສະແຫວງຫາເພື່ອຮູ້ຈັກພຣະທຳເຫຼົ່ານັ້ນ ກໍຈະຖືວ່າບໍ່ໄດ້ໃສ່ໃຈຕໍ່ເຮົາ ແລະ ຈະຖືກກວາດລ້າງອອກຈາກເຮືອນຂອງເຮົາໂດຍກົງ. ນີ້ກໍຍ້ອນວ່າ ດັ່ງທີ່ເຮົາໄດ້ກ່າວໃນອະດີດ ສິ່ງທີ່ເຮົາຕ້ອງການບໍ່ແມ່ນຄົນຈຳນວນຫຼາຍ, ແຕ່ເປັນຄົນທີ່ດີເລີດ. ຈາກບັນດາຮ້ອຍຄົນ, ຖ້າມີພຽງແຕ່ຄົນດຽວທີ່ສາມາດຮູ້ຈັກເຮົາຜ່ານທາງພຣະທຳຂອງເຮົາ, ແລ້ວເຮົາກໍຈະໂຍນຄົນອື່ນທີ່ເຫຼືອຖິ້ມໝົດ ເພື່ອສຸມໃສ່ໃນການໃຫ້ແສງສະຫວ່າງ ແລະ ແສງເຍືອງທາງໃຫ້ແກ່ຄົນນີ້ຄົນດຽວ. ຈາກສິ່ງນີ້ ເຈົ້າສາມາດເຫັນໄດ້ວ່າ ມັນບໍ່ເປັນຈິງທີ່ຄົນຈຳນວນຫຼວງຫຼາຍແຕ່ຢ່າງດຽວຈະສາມາດສະແດງເຖິງເຮົາໄດ້ ແລະ ດຳລົງຊີວິດຕາມເຮົາ. ສິ່ງທີ່ເຮົາຕ້ອງການແມ່ນເຂົ້າສາລີ (ເຖິງແມ່ນເມັດອາດບໍ່ຄົບຖ້ວນ) ແລະ ບໍ່ແມ່ນເຂົ້ານົກ (ເຖິງແມ່ນຈະມີເມັດຢ່າງຄົບຖ້ວນໃຫ້ຊື່ນຊົມກໍຕາມ). ສຳລັບຄົນທີ່ບໍ່ຄຳນຶງເຖິງການສະແຫວງຫາ, ແຕ່ກົງກັນຂ້າມ ປະພຶດໃນລັກສະນະແບບຄົນຂີ້ຄ້ານ, ພວກເຂົາຄວນໜີດ້ວຍຄວາມສະໝັກໃຈຂອງພວກເຂົາເອງ; ເຮົາບໍ່ປາຖະໜາທີ່ຈະເຫັນພວກເຂົາອີກຕໍ່ໄປ, ເພື່ອບໍ່ໃຫ້ພວກເຂົາສືບຕໍ່ນຳຄວາມອັບອາຍມາສູ່ນາມຂອງເຮົາ. ກ່ຽວກັບສິ່ງທີ່ເຮົາຮຽກຮ້ອງຈາກປະຊາຊົນຂອງເຮົາ, ເຮົາຈະຢຸດຢູ່ທີ່ຄຳສັ່ງສອນເຫຼົ່ານີ້ໄວ້ກ່ອນ ແລະ ຈະລໍຖ້າເພື່ອດຳເນີນການລົງໂທດເພີ່ມເຕີມ, ຂຶ້ນຢູ່ກັບວ່າສະຖານະການຈະປ່ຽນແປງແນວໃດ.

ໃນເມື່ອກ່ອນ, ຄົນສ່ວນໃຫຍ່ຄິດວ່າ ເຮົາເປັນພຣະເຈົ້າແຫ່ງສະຕິປັນຍາ, ເຮົາເປັນພຣະເຈົ້າອົງດຽວທີ່ເຫັນຫົວໃຈຂອງມະນຸດຢ່າງເລິກເຊິ່ງ; ເຖິງຢ່າງໃດກໍຕາມ ນີ້ເປັນພຽງແນວຄິດແບບຜິວເຜີນ. ຖ້າມະນຸດຮູ້ຈັກເຮົາຢ່າງແທ້ຈິງ, ພວກເຂົາຈະບໍ່ກ້າທີ່ຈະຟ້າວສະຫຼຸບແບບນັ້ນ, ແຕ່ກົງກັນຂ້າມຈະສືບຕໍ່ພະຍາຍາມທີ່ຈະຮູ້ຈັກເຮົາຜ່ານພຣະທຳຂອງເຮົາ. ມີແຕ່ເມື່ອພວກເຂົາໄດ້ມາເຖິງຂັ້ນຕອນທີ່ພວກເຂົາເຫັນການກະທຳຂອງເຮົາຢ່າງແທ້ຈິງ, ພວກເຂົາຈຶ່ງຈະສົມຄວນເອີ້ນເຮົາວ່າຜູ້ມີສະຕິປັນຍາ ແລະ ມະຫັດສະຈັນ. ຄວາມຮູ້ຂອງພວກເຈົ້າກ່ຽວກັບເຮົາແມ່ນຕື້ນເກີນໄປ. ທົ່ວທັງຍຸກຕ່າງໆ, ຫຼາຍຄົນໄດ້ຮັບໃຊ້ເຮົາເປັນເວລາຫຼາຍປີ ແລະ ເມື່ອໄດ້ເຫັນການກະທຳຂອງເຮົາ ພວກເຂົາກໍມາຮູ້ຈັກບາງສິ່ງກ່ຽວກັບເຮົາຢ່າງແທ້ຈິງ. ດ້ວຍເຫດຜົນນີ້, ພວກເຂົາຈຶ່ງເຄີຍມີຫົວໃຈທີ່ອ່ອນນ້ອມຕໍ່ເຮົາ, ບໍ່ກ້າທີ່ຈະມີເຈດຕະນາຕໍ່ຕ້ານເຮົາແມ່ນແຕ່ໜ້ອຍດຽວ ເນື່ອງຈາກມັນຍາກສໍ່າໃດທີ່ຈະສະແຫວງຫາຮອຍພຣະບາດຂອງເຮົາ. ຖ້າການນຳພາຂອງເຮົາຂາດໄປຈາກຜູ້ຄົນເຫຼົ່ານີ້, ພວກເຂົາກໍຈະບໍ່ກ້າປະພຶດຢ່າງຮ້ອນໃຈ. ສະນັ້ນ ຫຼັງຈາກໄດ້ດຳລົງຊີວິດຜ່ານປະສົບການຫຼາຍປີ, ໃນທີ່ສຸດ ພວກເຂົາກໍກ່າວສະຫຼຸບຄວາມຮູ້ບາງ

ສ່ວນກ່ຽວກັບເຮົາ, ໂດຍເອີ້ນເຮົາວ່າຜູ້ມີສະຕິປັນຍາ, ຜູ້ມະຫັດສະຈັນ ແລະ ທີ່ປຶກສາ, ພຣະທຳຂອງເຮົາເປັນຄືກັບດາບສອງຄົມ, ການກະທຳຂອງເຮົາຍິ່ງໃຫຍ່, ໜ້າປະທັບໃຈ ແລະ ມະຫັດສະຈັນ, ເຮົາແຕ່ງຕົວຢ່າງສະຫງ່າງາມ, ສະຕິປັນຍາຂອງເຮົາສູງກວ່າທ້ອງຟ້າ ແລະ ຄວາມເຂົ້າໃຈອື່ນໆ. ເຖິງຢ່າງໃດກໍຕາມ ໃນປັດຈຸບັນ ຄວາມຮູ້ຂອງພວກເຈົ້າກ່ຽວກັບເຮົາແມ່ນພຽງແຕ່ອີງຕາມພື້ນຖານທີ່ພວກເຈົ້າໄດ້ວາງໄວ້, ສະນັ້ນ ພວກເຈົ້າສ່ວນໃຫຍ່ຈຶ່ງພຽງແຕ່ເວົ້າຄຳເກົ່າຄືກັບນົກແກ້ວ. ມັນເປັນຍ້ອນວ່າ ເຮົາໄດ້ຄຳນຶງວ່າພວກເຈົ້າຮູ້ຈັກເຮົານັ້ນຕື້ນສໍ່າໃດ ແລະ “ການສຶກສາ” ຂອງພວກເຈົ້າຕໍ່າສໍ່າໃດ, ເຮົາຈຶ່ງລະເວັ້ນການຂ້ຽນຕີພວກເຈົ້າຢ່າງຮຸນແຮງ. ເຖິງຢ່າງນັ້ນກໍຕາມ, ພວກເຈົ້າສ່ວນໃຫຍ່ກໍຍັງບໍ່ຮູ້ຈັກຕົນເອງ ຫຼືຄິດວ່າ ພວກເຈົ້າໄດ້ປະຕິບັດຕາມຄວາມປະສົງຂອງເຮົາໃນການກະທຳຂອງພວກເຈົ້າແລ້ວ ແລະ ຍ້ອນເຫດຜົນນີ້ຈຶ່ງໄດ້ຫຼົບໜີຈາກການພິພາກສາ; ຫຼືວ່າ ຫຼັງຈາກທີ່ໄດ້ກາຍມາເປັນເນື້ອໜັງ ເຮົາກໍລືມການກະທຳຂອງມະນຸດຊາດຢ່າງສົມບູນ ແລະ ຍ້ອນເຫດຜົນນີ້ ພວກເຈົ້າຈຶ່ງໄດ້ຫຼົບໜີຈາກການຂ້ຽນຕີເຊັ່ນກັນ; ຫຼືວ່າ ພຣະເຈົ້າທີ່ພວກເຈົ້າເຊື່ອບໍ່ມີຢູ່ໃນຈັກກະວານອັນກວ້າງໃຫຍ່ໄພສານນີ້ ແລະ ດ້ວຍເຫດນັ້ນພວກເຈົ້າຈຶ່ງໄດ້ເຫັນການຮູ້ຈັກພຣະເຈົ້າເປັນພຽງວຽກເຮືອນທີ່ເຮັດໃນເວລາວ່າງຂອງພວກເຈົ້າເທົ່ານັ້ນແທນທີ່ຈະເຫັນເປັນສິ່ງທີ່ພວກເຈົ້າຕ້ອງຍຶດຖືໃນຫົວໃຈຂອງພວກເຈົ້າດັ່ງໜ້າທີ່ໆຕ້ອງປະຕິບັດ, ພວກເຈົ້າໃຊ້ຄວາມເຊື່ອໃນພຣະເຈົ້າເພື່ອຂ້າເວລາ ຖ້າບໍ່ດັ່ງນັ້ນເວລາຂອງພວກເຈົ້າກໍຈະສູນເສຍຢ່າງບໍ່ມີປະໂຫຍດ. ຖ້າເຮົາບໍ່ສົງສານທີ່ພວກເຈົ້າຂາດຄຸນສົມບັດ, ຂາດເຫດຜົນ ແລະ ຄວາມເຂົ້າໃຈ, ແລ້ວພວກເຈົ້າທຸກຄົນກໍຈະຈິບຫາຍໃນທ່າມກາງການຂ້ຽນຕີຂອງເຮົາ ແລະ ຖືກກວາດລ້າງອອກຈາກການມີຊີວິດຢູ່. ເຖິງຢ່າງໃດກໍຕາມ ຈົນກວ່າພາລະກິດຂອງເຮົາເທິງແຜ່ນດິນໂລກຈະສຳເລັດລົງ, ເຮົາຈະຍັງຄົງຜ່ອນຜັນກັບມະນຸດຊາດຕໍ່ໄປ. ນີ້ແມ່ນສິ່ງທີ່ພວກເຈົ້າທຸກຄົນຕ້ອງມີຄວາມຮູ້ ແລະ ຈົ່ງເລີ່ມຮູ້ຈັກຄວາມດີຈາກຄວາມຊົ່ວ.

ວັນທີ 25 ກຸມພາ 1992

# ບົດທີ 6

ການເຂົ້າໃຈຢ່າງລະອຽດເຖິງເລື່ອງລາວຂອງວິນຍານ, ການເອົາໃຈໃສ່ກັບພຣະທຳຂອງເຮົາ ແລະ ການມີຄວາມສາມາດຢ່າງແທ້ຈິງກ່ຽວກັບພຣະວິນຍານ ແລະ ຕົວຕົນຂອງເຮົາ, ກ່ຽວກັບພຣະທຳ ແລະ ຕົວຕົນຂອງເຮົາ ແມ່ນເປັນສິ່ງທີ່ແຍກອອກຈາກກັນບໍ່ໄດ້ ເພື່ອວ່າ ທຸກຄົນຈະສາມາດເຮັດໃຫ້ເຮົາພໍໃຈໃນເວລາຢູ່ຕໍ່ໜ້າເຮົາ. ເຮົາໄດ້ໄປທຸກບ່ອນທີ່ມີຢູ່, ເຮົາໄດ້ແນມເບິ່ງທົ່ວຈັກກະວານທີ່ກວ້າງໃຫຍ່ໄພສານ ແລະ ເຮົາໄດ້ຍ່າງໃນທ່າມກາງທຸກຄົນ, ໄດ້ຊີມຄວາມຫວານ ແລະ ຄວາມຂົມໃນທ່າມກາງມະນຸດ ແຕ່ມະນຸດກໍບໍ່ເຄີຍຮູ້ຈັກເຮົາຢ່າງແທ້ຈິງ, ບໍ່ເຄີຍເອົາໃຈໃສ່ເຮົາໃນລະຫວ່າງການເດີນທາງຂອງເຮົາ. ຍ້ອນເຮົາມິດງຽບ ແລະ ບໍ່ເຄີຍປະຕິບັດສິ່ງທີ່ເໜືອທຳມະຊາດ ຈຶ່ງບໍ່ມີໃຜເຄີຍເຫັນເຮົາຢ່າງແທ້ຈິງ. ປັດຈຸບັນແມ່ນບໍ່ຄືກັນກັບອະດີດ: ເຮົາຈະເຮັດໃນສິ່ງທີ່ບໍ່ເຄີຍເຫັນມາກ່ອນນັບແຕ່ເວລາຂອງການຊົງສ້າງ, ເຮົາຈະກ່າວພຣະທຳທີ່ບໍ່ມີໃຜເຄີຍໄດ້ຍິນມາກ່ອນຕະຫຼອດຍຸກຕ່າງໆ ເພາະວ່າ ເຮົາຂໍໃຫ້ທຸກຄົນມາຮູ້ຈັກເຮົາໃນເນື້ອໜັງ. ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຂອງການຄຸ້ມຄອງຂອງເຮົາ, ແຕ່ມະນຸດບໍ່ມີຄວາມສິງໄສແມ່ນແຕ່ໜ້ອຍດຽວ. ເຖິງວ່າ ເຮົາຈະໄດ້ເວົ້າແບບທຳມະດາ ແຕ່ຜູ້ຄົນກໍຍັງສັບສົນ; ມັນຍາກທີ່ຈະເຮັດໃຫ້ພວກເຂົາເຂົ້າໃຈ. ນີ້ບໍ່ແມ່ນຄວາມຕໍ່າຕ້ອຍຂອງມະນຸດບໍ? ນີ້ບໍ່ແມ່ນສິ່ງທີ່ເຮົາຕ້ອງການແກ້ໄຂບໍ? ເປັນເວລາຫຼາຍປີ ທີ່ເຮົາບໍ່ໄດ້ເຮັດຫຍັງໃນມະນຸດ; ເປັນເວລາຫຼາຍປີ ເຖິງຈະໄດ້ຕິດຕໍ່ພົວພັນກັບເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາໂດຍກົງ ແຕ່ກໍບໍ່ມີໃຜເຄີຍໄດ້ຍິນສຽງທີ່ອອກຈາກຄວາມເປັນພຣະເຈົ້າຂອງເຮົາໂດຍກົງ. ສະນັ້ນ ຜູ້ຄົນຈຶ່ງຂາດຄວາມຮູ້ກ່ຽວກັບເຮົາຢ່າງຫຼີກເວັ້ນບໍ່ໄດ້ ເຖິງແມ່ນວ່າ ສິ່ງນີ້ບໍ່ໄດ້ກະທົບຕໍ່ຄວາມຮັກຂອງພວກເຂົາ ທີ່ມີຕໍ່ເຮົາໃນຍຸກຕ່າງໆ. ຢ່າງໃດກໍຕາມ, ໃນປັດຈຸບັນ ເຮົາໄດ້ປະຕິບັດພາລະກິດຢ່າງມະຫັດສະຈັນໃນຕົວພວກເຈົ້າ ເຊິ່ງເປັນພາລະກິດທີ່ບໍ່ສາມາດຢັ່ງເຖິງ ແລະ ປະເມີນໄດ້ ແລະ ເຮົາກໍໄດ້ກ່າວພຣະທຳຫຼາຍຂໍ້. ແຕ່ພາຍໃຕ້ສະຖານະການດັ່ງກ່າວ ຍັງມີຫຼາຍຄົນທີ່ຕໍ່ຕ້ານເຮົາໂດຍກົງໃນເວລາຢູ່ຕໍ່ໜ້າເຮົາ. ບັດນີ້ເຮົາຈະສະແດງຕົວຢ່າງເລັກນ້ອຍໃຫ້ເຈົ້າເຫັນ.

ທຸກມື້ ເຈົ້າຈະອະທິຖານເຖິງພຣະເຈົ້າທີ່ເລື່ອນລອຍ, ພະຍາຍາມເຂົ້າໃຈຄວາມປະສົງຂອງເຮົາ ແລະ ຕ້ອງການສຳຜັດກັບຊີວິດ. ແຕ່ເມື່ອພະເຊີນກັບພຣະທຳຂອງເຮົາ ເຈົ້າຈະເບິ່ງພຣະທຳເຫຼົ່ານັ້ນດ້ວຍຄວາມແຕກຕ່າງ; ເຈົ້າຈະຮັບເອົາ ພຣະທຳ ແລະ ພຣະວິນຍານຂອງເຮົາເປັນສິ່ງດຽວກັນ ແຕ່ເຕະຕົວຕົນຂອງເຮົາອອກໄປທາງຂ້າງ ໂດຍເຊື່ອວ່າຕົວເຮົາທີ່ເປັນເນື້ອໜັງບໍ່ສາມາດກ່າວພຣະທຳດັ່ງກ່າວໄດ້ຢ່າງແທ້ຈິງ ເຊິ່ງສິ່ງເຫຼົ່ານັ້ນແມ່ນຖືກຄວບຄຸມໂດຍພຣະວິນຍານຂອງເຮົາ. ແລ້ວຄວາມຮູ້ຂອງເຈົ້າໃນສະຖານະການດັ່ງກ່າວແມ່ນຫຍັງ? ເຈົ້າເຊື່ອໃນພຣະທຳຂອງເຮົາຈົນເຖິງຈຸດໃດໜຶ່ງ ແຕ່ພັດມີແນວຄິດຕ່າງໆຢ່າງຮຸນແຮງຕໍ່ເນື້ອໜັງທີ່ປົກຫຸ້ມຕົວເຮົາ. ເຈົ້າໃຊ້ເວລາທຸກມື້ໃນການສຶກສາສິ່ງນີ້ ແລະ ເວົ້າວ່າ "ເປັນຫຍັງພຣະອົງເຮັດສິ່ງຕ່າງໆດ້ວຍວິທີນີ້? ສິ່ງເຫຼົ່ານັ້ນແມ່ນມາຈາກພຣະເຈົ້າແທ້ບໍ? ເປັນໄປບໍ່ໄດ້! ພຣະອົງບໍ່ໄດ້ແຕກຕ່າງຈາກເຮົາຫຼາຍ. ພຣະອົງເປັນຄົນທຳມະດາ ແລະ ປົກກະຕິຄືກັນ". ແລ້ວສະຖານະການດັ່ງກ່າວຈະຖືກອະທິບາຍໄດ້ແນວໃດ?

ແມ່ນໃຜໃນທ່າມກາງພວກເຈົ້າ ທີ່ບໍ່ມີສິ່ງກ່າວມາຂ້າງເທິງ? ແມ່ນໃຜທີ່ບໍ່ວຸ້ນຢູ່ກັບສິ່ງດັ່ງກ່າວ? ສິ່ງເຫຼົ່ານັ້ນປະກົດວ່າເປັນສິ່ງທີ່ເຈົ້າຍຶດໄວ້ຄືກັບຊິ້ນສ່ວນຂອງຊັບສິນສ່ວນຕົວ ໂດຍບໍ່ເຄີຍເຕັມໃຈທີ່ຈະປ່ອຍສິ່ງເຫຼົ່ານັ້ນໄປ. ແຮງໄກທີ່ເຈົ້າຈະສະແຫວງຫາຄວາມພະຍາຍາມຕາມຄວາມຄິດຂອງຕົວເອງ; ກົງກັນຂ້າມ ເຈົ້າແມ່ນລໍຖ້າໃຫ້ເຮົາເຮັດສິ່ງນີ້ດ້ວຍຕົວເຮົາເອງ. ຂໍເວົ້າຕາມກົງ, ບໍ່ມີແມ່ນແຕ່ຄົນດຽວທີ່ບໍ່ສະແຫວງຫາ ທີ່ຈະມາຮູ້ຈັກເຮົາດ້ວຍຄວາມງ່າຍດາຍ. ສິ່ງເຫຼົ່ານີ້ບໍ່ແມ່ນພຣະທຳທີ່ບໍ່ມີຄວາມໝາຍທີ່ເຮົາໄດ້ສອນພວກເຈົ້າ. ເພາະເຮົາສາມາດໃຫ້ຕົວຢ່າງອື່ນກັບເຈົ້າຈາກມຸມມອງອື່ນ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າ.

ເມື່ອກ່າວເຖິງເປໂຕ, ຜູ້ຄົນແມ່ນມີແຕ່ສິ່ງດີໆທີ່ຈະເວົ້າກ່ຽວກັບລາວໂດຍບໍ່ມີວັນສິ້ນສຸດ. ພວກເຂົາສາມາດຈື່ໄດ້ເຖິງສາມຄັ້ງທີ່ລາວບໍ່ຍອມຮັບພຣະເຈົ້າ, ວິທີທີ່ລາວທົດສອບພຣະເຈົ້າໂດຍການໃຫ້ບໍລິການແກ່ຊາຕານ ແລະ ໃນທີ່ສຸດ ກໍຄືການຖືກຄຶງປີ້ນຫົວລົງຢູ່ເທິງໄມ້ກາງແຂນເພື່ອພຣະເຈົ້າ ແລະ ອື່ນໆ. ບັດນີ້ ເຮົາຈະສຸມໃສ່ການອະທິບາຍໃຫ້ພວກເຈົ້າຮູ້ວ່າ ເປໂຕຮູ້ຈັກເຮົາແນວໃດ ແລະ ຈຸດຈົບຂອງລາວເປັນແບບໃດ. ເປໂຕມີຄວາມສາມາດດີ ແຕ່ສະຖານະການຂອງລາວບໍ່ຄືກັນກັບໂປໂລ: ພໍ່ແມ່ຂອງລາວຂົ່ມເຫັງເຮົາ, ພວກເຂົາເປັນຜີສາດທີ່ຖືກຊາຕານຄອບງຳ ແລະ ດ້ວຍເຫດນັ້ນພວກເຂົາຈຶ່ງບໍ່ໄດ້ສອນຫຍັງກ່ຽວກັບພຣະເຈົ້າໃຫ້ເປໂຕ. ເປໂຕສະຫຼາດ, ມີພອນສະຫວັນ ແລະ ໄດ້ຮັບຄວາມຮັກຫຼາຍຈາກພໍ່ແມ່ຂອງລາວໃນຕອນອາຍຸຍັງນ້ອຍ. ແຕ່ເຖິງຢ່າງນັ້ນກໍຕາມ ໃນຕອນທີ່ເປັນຜູ້ໃຫຍ່ ລາວໄດ້ກາຍເປັນສັດຕູຂອງພວກເຂົາ ຍ້ອນລາວບໍ່ເຄີຍຢຸດທີ່ຈະສະແຫວງຫາຄວາມຮູ້ກ່ຽວກັບເຮົາ ແລະ ຕໍ່ມາກໍໄດ້ຫັນຫຼັງຂອງລາວໃຫ້ກັບພວກເຂົາ. ສຳຄັນໄປກວ່ານັ້ນ ກໍຍ້ອນລາວເຊື່ອວ່າສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງແມ່ນຢູ່ໃນມືຂອງພຣະອົງຜູ້ຊົງລິດທານຸພາບສູງສຸດ ແລະ ທຸກສິ່ງທີ່ເປັນບວກແມ່ນມາຈາກພຣະເຈົ້າ ແລະ ອອກຈາກພຣະອົງໂດຍກົງ ໂດຍບໍ່ຖືກຄອບງຳໂດຍຊາຕານ. ຄວາມຂັດແຍ້ງຂອງພໍ່ແມ່ຂອງເປໂຕໄດ້ມອບຄວາມຮູ້ທີ່ຍິ່ງໃຫຍ່ກ່ຽວກັບຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາໃຫ້ແກ່ລາວ ເຊິ່ງດ້ວຍເຫດນັ້ນ ລາວຈຶ່ງສະແຫວງຫາເຮົາຫຼາຍຂຶ້ນ. ພຣະອົງບໍ່ໄດ້ສຸມໃສ່ແຕ່ການກິນ ແລະ ການດື່ມພຣະທຳ ແຕ່ຍິ່ງໄປກວ່ານັ້ນ ແມ່ນການເຂົ້າໃຈຄວາມປະສົງຂອງເຮົາ ແລະ ລະມັດລະວັງໃນໃຈຂອງພຣະອົງຕະຫຼອດເວລາ. ດ້ວຍເຫດນັ້ນ, ລາວຈຶ່ງມີຄວາມອ່ອນໄຫວໃນຈິດໃຈຂອງລາວສະເໝີ ແລະ ສະນັ້ນ ລາວຈຶ່ງປະຕິບັດຕາມໃຈເຮົາໃນທຸກສິ່ງທີ່ລາວເຮັດ. ລາວຕັ້ງໃຈຢ່າງໝັ້ນຄົງ ກ່ຽວກັບຄວາມລົ້ມເຫຼວຂອງຜູ້ຄົນໃນອະດີດ ເພື່ອກະຕຸ້ນຕົວເອງ ໂດຍມີຄວາມຢ້ານກົວຢູ່ເລິກໆວ່າຈະຕົກຢູ່ໃນຄວາມລົ້ມເຫຼວ. ພ້ອມນັ້ນ ລາວຍັງໄດ້ຕັ້ງໃຈກັບການຮັບເອົາຄວາມເຊື່ອ ແລະ ຄວາມຮັກຂອງທຸກຄົນ ທີ່ຮັກພຣະເຈົ້າຕະຫຼອດຍຸກຕ່າງໆເຊັ່ນກັນ. ບໍ່ພຽງແຕ່ໃນດ້ານລົບແຕ່ສຳຄັນຫຼາຍໄປກວ່ານັ້ນ ແມ່ນໃນດ້ານບວກ, ລາວໄດ້ເຕີບໃຫຍ່ໄວຂຶ້ນ ຈົນຄວາມຮູ້ຂອງລາວໄດ້ກາຍເປັນສິ່ງທີ່ຍິ່ງໃຫຍ່ທີ່ສຸດເວລາຢູ່ຕໍ່ໜ້າເຮົາ. ໃນຕອນນັ້ນ ມັນບໍ່ຍາກທີ່ຈະຈິນຕະນາການເຖິງວິທີທີ່ລາວເອົາທຸກສິ່ງທີ່ລາວມີມາຢູ່ໃນມືຂອງເຮົາ, ແມ່ນແຕ່ວິທີທີ່ລາວຍອມສະຫຼະສິດໃນການຕັດສິນໃຈກ່ຽວກັບອາຫານ, ເຄື່ອງໜຸ່ງ, ການນອນ ແລະ ບ່ອນທີ່ລາວອາໄສຢູ່ ແລະ ກົງກັນຂ້າມ ມາມີຄວາມ

ສຸກກັບຄວາມອຸດົມສົມບູນຂອງເຮົາ ບົນພື້ນຖານຂອງການເຮັດໃຫ້ເຮົາພໍໃຈໃນທຸກສິ່ງ. ເຮົາເຮັດໃຫ້ລາວໄດ້ຮັບການທົດລອງຈົນນັບບໍ່ຖ້ວນ ເຊິ່ງໂດຍທຳມະຊາດແລ້ວ ແມ່ນການທົດລອງທີ່ເຮັດໃຫ້ລາວຕາຍໄປເຄິ່ງໜຶ່ງ ແຕ່ໃນທ່າມກາງການທົດລອງເປັນຮ້ອຍເຫຼົ່ານີ້ ລາວບໍ່ເຄີຍເສຍຄວາມເຊື່ອ ທີ່ມີໃນຕົວເຮົາ ຫຼື ຮູ້ສຶກຜິດຫວັງໃນຕົວເຮົາແມ່ນແຕ່ໜຶ່ງຄັ້ງ. ແມ່ນແຕ່ໃນເວລາທີ່ເຮົາໄດ້ເວົ້າວ່າ ເຮົາໄດ້ປະຖິ້ມລາວ, ລາວກໍຍັງບໍ່ໄດ້ໝົດກຳລັງໃຈ ແລະ ໄດ້ສືບຕໍ່ຮັກເຮົາໃນທາງທີ່ເປັນຈິງ ແລະ ຕາມຫຼັກການຂອງການປະຕິບັດໃນອະດີດ. ເຮົາໄດ້ບອກລາວວ່າ ເຮົາຈະບໍ່ສັນລະເສີນລາວ ເຖິງແມ່ນວ່າລາວຈະໄດ້ຮັກເຮົາກໍຕາມ ແລະ ໃນທີ່ສຸດແລ້ວ ເຮົາຈະຂັບໄລ່ລາວໃຫ້ໄປຢູ່ໃນມືຂອງຊາຕານ. ແຕ່ໃນທ່າມກາງການທົດລອງດັ່ງກ່າວ ເຊິ່ງເປັນການທົດລອງທີ່ບໍ່ແມ່ນກັບເນື້ອໜັງຂອງລາວ ແຕ່ແມ່ນທາງພຣະທຳ, ລາວຍັງອະທິຖານເຖິງເຮົາ ແລະ ເວົ້າວ່າ “ໂອ ພຣະເຈົ້າ! ໃນທ່າມກາງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງ ແມ່ນມີມະນຸດໃດໜຶ່ງ, ສິ່ງຊີງສ້າງໃດໜຶ່ງ ຫຼື ສິ່ງໃດໜຶ່ງບໍ ທີ່ບໍ່ໄດ້ຢູ່ໃນກຳມືຂອງພຣະອົງຜູ້ຊົງລິດທານຸພາບສູງສຸດ? ເມື່ອພຣະອົງມີຄວາມເມດຕາຕໍ່ຂ້ານ້ອຍ, ຫົວໃຈຂອງຂ້ານ້ອຍກໍດີໃຈຫຼາຍກັບຄວາມເມດຕາຂອງພຣະອົງ. ໃນເວລາທີ່ພຣະອົງພິພາກສາຂ້ານ້ອຍ, ເຖິງວ່າ ຂ້ານ້ອຍຈະບໍ່ຄູ່ຄວນ ແຕ່ຂ້ານ້ອຍກໍໄດ້ຮັບຄວາມຮູ້ສຶກທີ່ຍິ່ງໃຫຍ່ ເຖິງຄວາມບໍ່ສາມາດຢັ່ງເຖິງການກະທຳຂອງພຣະອົງ ຍ້ອນພຣະອົງແມ່ນເຕັມໄປດ້ວຍອຳນາດ ແລະ ສະຕິປັນຍາ. ເຖິງວ່າ ເນື້ອໜັງຂອງຂ້ານ້ອຍຈະທົນທຸກກັບຄວາມລຳບາກ ແຕ່ຈິດວິນຍານຂອງຂ້ານ້ອຍກໍຢູ່ສຸກສະບາຍ. ຂ້ານ້ອຍຈະບໍ່ມອບຄຳສັນລະເສີນໃຫ້ແກ່ສະຕິປັນຍາ ແລະ ການກະທຳຂອງພຣະອົງໄດ້ແນວໃດ? ຖ້າວ່າ ຂ້ານ້ອຍຈະຕາຍຫຼັງຈາກຮູ້ຈັກພຣະອົງ ແລ້ວຂ້ານ້ອຍຈະບໍ່ຕາຍດ້ວຍຄວາມພໍໃຈ ແລະ ຍິນດີໄດ້ແນວໃດ? ພຣະອົງຜູ້ຊົງລິດທານຸພາບສູງສຸດ! ພຣະອົງບໍ່ປາດຖະໜາທີ່ຈະໃຫ້ຂ້ານ້ອຍເຫັນພຣະອົງແທ້ບໍ? ຂ້ານ້ອຍບໍ່ເໝາະສົມທີ່ຈະໄດ້ຮັບການພິພາກສາຂອງພຣະອົງແທ້ບໍ? ເປັນໄປໄດ້ບໍ ທີ່ມີບາງຢ່າງໃນຕົວຂ້ານ້ອຍ ທີ່ພຣະອົງບໍ່ປາດຖະໜາທີ່ຈະເຫັນ?” ໃນລະຫວ່າງການທົດລອງດັ່ງກ່າວ, ເຖິງວ່າ ເປໂຕບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາຢ່າງຖືກຕ້ອງ ແຕ່ມັນກໍສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ລາວພາກພູມໃຈ ແລະ ຮູ້ສຶກມີກຽດ ທີ່ຖືກເຮົາໃຊ້ (ເຖິງແມ່ນວ່າ ລາວຈະໄດ້ຮັບການພິພາກສາຈາກເຮົາ ເພື່ອວ່າ ມວນມະນຸດອາດຈະໄດ້ເຫັນລິດທານຸພາບ ແລະ ຄວາມໂກດຮ້າຍຂອງເຮົາ) ແລະ ລາວບໍ່ໂສກເສົ້າຈາກການທົດລອງເຫຼົ່ານີ້. ຍ້ອນຄວາມຈົງຮັກພັກດີຂອງລາວ ທີ່ມີຢູ່ຕໍ່ໜ້າເຮົາ ແລະ ຍ້ອນພອນຂອງເຮົາທີ່ມີໃຫ້ລາວ, ລາວຈຶ່ງເປັນຕົວຢ່າງ ແລະ ແບບຢ່າງໃຫ້ແກ່ມະນຸດເປັນພັນໆປີ. ນີ້ບໍ່ແມ່ນສິ່ງທີ່ພວກເຈົ້າຄວນເອົາເປັນແບບຢ່າງບໍ? ຈົ່ງຄິດຢ່າງລະອຽດ ແລະ ຄິດໃຫ້ດີ ກ່ຽວກັບວ່າ ເປັນຫຍັງເຮົາຈຶ່ງໃຫ້ການບັນຍາຍຢ່າງຍາວກ່ຽວກັບເປໂຕ; ສິ່ງເຫຼົ່ານີ້ຄວນເປັນຫຼັກການໃນການກະທຳຂອງພວກເຈົ້າ.

ເຖິງແມ່ນວ່າ ຜູ້ຄົນສ່ວນໜ້ອຍຈະຮູ້ຈັກເຮົາ ແຕ່ເຮົາກໍບໍ່ປ່ອຍຄວາມໂກດຮ້າຍຂອງເຮົາໃສ່ມະນຸດ ຍ້ອນວ່າ ຜູ້ຄົນຍັງຂາດແຄນຫຼາຍ ແລະ ມັນຍາກສຳລັບພວກເຂົາ ທີ່ຈະໄດ້ຮັບລະດັບ ທີ່ເຮົາຮຽກຮ້ອງຈາກພວກເຂົາ. ສະນັ້ນ, ເຮົາຈຶ່ງໄດ້ອົດທົນກັບມະນຸດເປັນເວລາຫຼາຍພັນປີຈົນຮອດປັດຈຸບັນ ແຕ່ເຮົາກໍຫວັງວ່າ ພວກເຈົ້າຈະບໍ່ໃຈເຢັນກັບຕົວເອງ ຍ້ອນຄວາມອົດທົນຂອງເຮົາ. ຜ່ານທາງເປໂຕ

ເຈົ້າຄວນຮູ້ຈັກເຮົາ ແລະ ສະແຫວງຫາເຮົາ; ຈາກຄວາມສຳເລັດທັງໝົດຂອງລາວ ເຈົ້າຄວນໄດ້ຮັບແສງສະຫວ່າງທີ່ບໍ່ເຄີຍໄດ້ຮັບມາກ່ອນ ແລະ ດ້ວຍເຫດນັ້ນ ກໍຈະໄດ້ຮັບຂອບເຂດທີ່ມະນຸດບໍ່ເຄີຍໄປຮອດມາກ່ອນ. ຕະຫຼອດທົ່ວຈັກກະວານ ແລະ ທ້ອງຟ້າໃນທ່າມກາງທຸກສິ່ງໃນສະຫວັນ ແລະ ເທິງແຜ່ນດິນໂລກ, ທຸກສິ່ງຢູ່ເທິງແຜ່ນດິນໂລກ ແລະ ໃນສະຫວັນແມ່ນໄດ້ມອບຄວາມພະຍາຍາມທັງໝົດຂອງພວກເຂົາ ເພື່ອຂັ້ນຕອນສຸດທ້າຍຂອງພາລະກິດຂອງເຮົາ. ແນ່ນອນ ພວກເຈົ້າຄົງບໍ່ປາດຖະໜາທີ່ຈະເປັນຜູ້ຊົມ ທີ່ຖືກສັ່ງການໄປມາໂດຍກອງກຳລັງຂອງ ຊາຕານແມ່ນບໍ? ໃນທຸກມື້ນີ້ ຊາຕານແມ່ນກຳລັງກືນກິນຄວາມຮູ້ກ່ຽວກັບເຮົາໃນໃຈຂອງຜູ້ຄົນ, ກັດແຂ້ວຂອງມັນ ແລະ ພື່ງເລັບຂອງມັນອອກໃນຄວາມພະຍາຍາມຂັ້ນສຸດທ້າຍຂອງມັນ. ພວກເຈົ້າປາດຖະໜາທີ່ຈະຕົກເປັນເຍື່ອຂອງແຜນການຫຼອກລວງຂອງມັນໃນເວລານີ້ບໍ? ພວກເຈົ້າປາດຖະໜາທີ່ຈະທຳລາຍຊີວິດຂອງຕົວເອງ ໃນເວລາທີ່ພາລະກິດຂອງເຮົາສຳເລັດໃນທີ່ສຸດບໍ? ພວກເຈົ້າກຳລັງລໍຖ້າເຮົາ ເພື່ອໃຫ້ເຮົາສະແດງຄວາມອົດທົນຂອງເຮົາອີກຄັ້ງບໍ? ການສະແຫວງຫາຄວາມຮູ້ກ່ຽວກັບເຮົາແມ່ນກະແຈສຳຄັນ ແຕ່ການເອົາໃຈໃສ່ກັບການປະຕິບັດແມ່ນຂາດບໍ່ໄດ້. ພຣະທຳຂອງເຮົາແມ່ນຖືກເປີດເຜີຍຕໍ່ພວກເຈົ້າໂດຍກົງ ແລະ ເຮົາຫວັງວ່າ ພວກເຈົ້າຈະສາມາດປະຕິບັດຕາມການນຳພາຂອງເຮົາ ແລະ ບໍ່ມີແຜນ ແລະ ຄວາມທະເຍີທະຍານເພື່ອຕົວເອງອີກຕໍ່ໄປ.

ວັນທີ 27 ກຸມພາ 1992

# ບົດທີ 7

ຂະແໜງຕະເວັນຕົກທັງໝົດຄວນຟັງສຽງຂອງເຮົາ:

ໃນອະດີດ, ພວກເຈົ້າໄດ້ຊື່ສັດຕໍ່ເຮົາບໍ? ພວກເຈົ້າໄດ້ຟັງຖ້ອຍຄຳແຫ່ງການແນະນຳທີ່ດີເລີດຂອງເຮົາບໍ? ຄວາມຫວັງຂອງພວກເຈົ້າເປັນຈິງ ແລະ ບໍ່ເລື່ອນລອຍ ແລະ ແນ່ນອນບໍ? ຄວາມຊື່ສັດຂອງມະນຸດຊາດ, ຄວາມຮັກຂອງມະນຸດຊາດ, ຄວາມເຊື່ອຂອງມະນຸດຊາດ, ບໍ່ມີສິ່ງໃດທີ່ບໍ່ໄດ້ມາຈາກເຮົາ ແລະ ບໍ່ມີສິ່ງໃດທີ່ເຮົາບໍ່ໄດ້ປະທານ. ປະຊາຊົນຂອງເຮົາ ເມື່ອເຈົ້າໄດ້ຟັງພຣະທຳຂອງເຮົາ, ພວກເຈົ້າເຂົ້າໃຈຄວາມປະສົງຂອງເຮົາບໍ? ພວກເຈົ້າເຫັນຫົວໃຈຂອງເຮົາບໍ? ໂດຍບໍ່ຄຳນຶງເຖິງຄວາມຈິງທີ່ວ່າ ໃນອະດີດ ເມື່ອຢູ່ໃນເສັ້ນທາງແຫ່ງການຮັບໃຊ້, ພວກເຈົ້າໄດ້ພົບກັບເຫດການຂຶ້ນໆລົງໆ, ຄວາມກ້າວໜ້າ ແລະ ຄວາມລົ້ມເຫຼວ ແລະ ເຫດການທີ່ເຈົ້າຢູ່ໃນອັນຕະລາຍທີ່ຈະລົ້ມລົງ ແລະ ແມ່ນແຕ່ທໍລະຍົດຕໍ່ເຮົາ, ພວກເຈົ້າຮູ້ບໍວ່າເຮົາກຳລັງຊ່ວຍພວກເຈົ້າໃຫ້ລອດພົ້ນຢ່າງສະໝໍ່າສະເໝີໃນທຸກຊ່ວງເວລາ? ເຮົາກຳລັງສົ່ງສຽງຂອງເຮົາເພື່ອຮຽກເອີ້ນ ແລະ ຊ່ວຍເຫຼືອພວກເຈົ້າຢູ່ຕະຫຼອດເວລາ? ເປັນເວລາຫຼາຍຄັ້ງທີ່ພວກເຈົ້າໄດ້ຕົກລົງສູ່ດາງແຫຂອງຊາຕານ; ເປັນເວລາຫຼາຍຄັ້ງທີ່ພວກເຈົ້າໄດ້ຕິດໃນບ້ວງແຮ້ວຂອງຄວາມເປັນມະນຸດ; ເປັນເວລາຫຼາຍຄັ້ງທີ່ພວກເຈົ້າລົ້ມເຫຼວໃນການປ່ອຍວາງຕົນເອງ ແລະ ຕົກຢູ່ໃນການໂຕ້ຖຽງກັນຢ່າງບໍ່ສິ້ນສຸດ. ເປັນເວລາຫຼາຍຄັ້ງທີ່ຮ່າງກາຍຂອງເຈົ້າຢູ່ໃນເຮືອນຂອງເຮົາ ໃນຂະນະທີ່ຫົວໃຈຂອງເຈົ້າບໍ່ສາມາດຄົ້ນພົບໄດ້. ເຖິງຢ່າງໃດກໍຕາມ, ເປັນເວລາຫຼາຍຄັ້ງທີ່ເຮົາໄດ້ຍື່ນມືແຫ່ງຄວາມຊ່ວຍເຫຼືອຂອງເຮົາເພື່ອຊຸກຍູ້ພວກເຈົ້າ ແລະ ເປັນເວລາຫຼາຍຄັ້ງທີ່ເຮົາໄດ້ໂຍນເມັດພືດແຫ່ງຄວາມເມດຕາລົງທ່າມກາງພວກເຈົ້າ. ເປັນເວລາຫຼາຍຄັ້ງທີ່ເຮົາບໍ່ສາມາດທົນເບິ່ງຄວາມເຈັບປວດຂອງພວກເຈົ້າຫຼັງຈາກຖືກທໍລະມານ; ເປັນເວລາຫຼາຍຄັ້ງ... ພວກເຈົ້າຮູ້ສິ່ງນີ້ບໍ?

ເຖິງຢ່າງໃດກໍຕາມ ໃນປັດຈຸບັນ ໃນການຮັກສາຂອງເຮົາ ພວກເຈົ້າໄດ້ເອົາຊະນະຄວາມລຳບາກທຸກຢ່າງໃນທີ່ສຸດ ແລະ ເຮົາກໍຍິນດີກັບພວກເຈົ້າ; ນີ້ຄືແກ້ວຜະລຶກແຫ່ງສະຕິປັນຍາຂອງເຮົາ. ເຖິງຢ່າງໃດກໍຕາມ, ຈົ່ງຈື່ສິ່ງນີ້ໄວ້ໃຫ້ດີ! ມີຜູ້ໃດແດ່ທີ່ໄດ້ລົ້ມລົງ ໃນຂະນະທີ່ພວກເຈົ້າເອງຍັງເຂັ້ມແຂງຢູ່? ຜູ້ໃດແດ່ທີ່ເຂັ້ມແຂງໂດຍບໍ່ມີຊ່ວງເວລາແຫ່ງຄວາມອ່ອນແອຈັກເທື່ອ? ໃນບັນດາມະນຸດ, ຜູ້ໃດໄດ້ຮັບເອົາພອນທີ່ບໍ່ໄດ້ມາຈາກເຮົາບໍ່? ຜູ້ໃດໄດ້ພະເຊີນກັບຄວາມໂຊກຮ້າຍທີ່ບໍ່ໄດ້ມາຈາກເຮົາແດ່? ເປັນໄປໄດ້ບໍວ່າ ທຸກຄົນທີ່ຮັກເຮົາຈະໄດ້ຮັບພຽງແຕ່ພອນເທົ່ານັ້ນ? ເປັນໄປໄດ້ບໍວ່າ ຄວາມໂຊກຮ້າຍເກີດຂຶ້ນກັບໂຢບຍ້ອນເພິ່ນບໍ່ໄດ້ຮັກເຮົາ, ກົງກັນຂ້າມ ເພິ່ນເລືອກທີ່ຈະຕໍ່ຕ້ານເຮົາ? ເປັນໄປໄດ້ບໍວ່າ ການທີ່ໂປໂລສາມາດຮັບໃຊ້ເຮົາດ້ວຍຄວາມຊື່ສັດຕໍ່ໜ້າເຮົາກໍຍ້ອນເພິ່ນສາມາດຮັກເຮົາຢ່າງແທ້ຈິງ? ເຖິງແມ່ນພວກເຈົ້າອາດຍຶດໝັ້ນກັບຄຳພະຍານ, ມີຜູ້ໃດທ່າມກາງພວກເຈົ້າແດ່ ທີ່ມີຄຳພະຍານທີ່ບໍ່ໄດ້ປົນກັບຄວາມເປິເປື້ອນດັ່ງທອງຄຳບໍລິສຸດ? ມະນຸດສາມາດມີຄວາມຊື່ສັດທີ່ແທ້ຈິງບໍ? ການທີ່ຄຳພະຍານຂອງພວກເຈົ້ານຳຄວາມສຸກມາໃຫ້ແກ່ເຮົາບໍ່ໄດ້ຂັດແຍ້ງກັບ "ຄວາມຊື່ສັດ" ຂອງພວກເຈົ້າ, ຍ້ອນເຮົາບໍ່ເຄີຍຮຽກຮ້ອງຫຍັງຫຼາຍຈາກຄົນໃດໜຶ່ງ. ເມື່ອປະຕິບັດຕາມເຈດຕະນາເດີມທີ່ຢູ່ເບື້ອງຫຼັງແຜນການ

ຂອງເຮົາ, ພວກເຈົ້າທຸກຄົນຈະເປັນ "ສິນຄ້າທີ່ໃຊ້ການບໍ່ໄດ້", ບໍ່ໄດ້ມາດຕະຖານ. ນີ້ບໍ່ແມ່ນຕົວຢ່າງທີ່ເຮົາໄດ້ບອກພວກເຈົ້າກ່ຽວກັບ "ການໂຍນເມັດພືດແຫ່ງຄວາມເມດຕາ" ບໍ? ສິ່ງທີ່ພວກເຈົ້າເຫັນແມ່ນຄວາມລອດພົ້ນຂອງເຮົາບໍ?

ພວກເຈົ້າທຸກຄົນຄວນຄິດຍ້ອນຫຼັງ ແລະ ທວນຄິດຄືນຫຼັງວ່າ: ນັບຕັ້ງແຕ່ທີ່ໄດ້ກັບຄືນສູ່ເຮືອນຂອງເຮົາ, ມີຜູ້ໃດແດ່ໃນບັນດາພວກເຈົ້າທີ່ໄດ້ມາຮູ້ຈັກເຮົາໃນລັກສະນະທີ່ເປໂຕຮູ້ຈັກ ໂດຍບໍ່ຄຳນຶງເຖິງຜົນປະໂຫຍດ ຫຼື ການສູນເສຍຂອງພວກເຈົ້າ? ພວກເຈົ້າໄດ້ຮຽນຮູ້ສ່ວນໜຶ່ງຂອງພຣະຄຳພີຢ່າງຜິວເຜີນ, ແຕ່ພວກເຈົ້າໄດ້ຊຶມຊັບເອົາແກ່ນແທ້ຂອງມັນບໍ? ເມື່ອເປັນເຊັ່ນນັ້ນ ເຈົ້າກໍຍັງຍຶດຖືຢູ່ກັບ "ຕົ້ນທຶນ" ຂອງເຈົ້າ, ໂດຍປະຕິເສດທີ່ຈະປ່ອຍວາງກັບຕົນເອງຢ່າງແທ້ຈິງ. ເມື່ອເຮົາກ່າວຖ້ອຍຄຳ, ເມື່ອເຮົາເວົ້າກັບພວກເຈົ້າໜ້າຕໍ່ໜ້າ, ມີຜູ້ໃດທ່າມກາງພວກເຈົ້າແດ່ທີ່ເຄີຍວາງໜັງສືມ້ວນທີ່ປິດໄວ້ຂອງພວກເຈົ້າລົງເພື່ອຮັບເອົາພຣະທຳແຫ່ງຊີວິດ ທີ່ເຮົາເປີດເຜີຍ? ພວກເຈົ້າບໍ່ຄຳນຶງເຖິງພຣະທຳຂອງເຮົາ ຫຼື ພວກເຈົ້າບໍ່ຊື່ນຊົມໃນພຣະທຳເຫຼົ່ານັ້ນ. ກົງກັນຂ້າມ, ພວກເຈົ້າໃຊ້ພຣະທຳເຫຼົ່ານັ້ນເພື່ອຍິງໃສ່ສັດຕູຂອງພວກເຈົ້າຄືກັບປືນກົນ ເພື່ອຮັກສາຕຳແໜ່ງຂອງພວກເຈົ້າເອງ; ພວກເຈົ້າບໍ່ພະຍາຍາມຮັບເອົາການພິພາກສາຂອງເຮົາແມ່ນແຕ່ໜ້ອຍດຽວເພື່ອມາຮູ້ຈັກເຮົາ. ພວກເຈົ້າແຕ່ລະຄົນແນອາວຸດໃສ່ຄົນອື່ນ; ພວກເຈົ້າທຸກຄົນ "ບໍ່ເຫັນແກ່ຕົວ" ແລະ ພວກເຈົ້າ "ເຫັນແກ່ຄົນອື່ນ" ໃນທຸກສະຖານະການ. ນີ້ບໍ່ແມ່ນສິ່ງທີ່ພວກເຈົ້າໄດ້ເຮັດໃນມື້ວານບໍ? ແລ້ວມື້ນີ້ເດ? "ຄວາມຊື່ສັດ" ຂອງພວກເຈົ້າໄດ້ເພີ່ມຂຶ້ນສອງສາມຈຸດ ແລະ ພວກເຈົ້າທຸກຄົນມີປະສົບການເພີ່ມຂຶ້ນເລັກນ້ອຍ ແລະ ເປັນຜູ້ໃຫຍ່ຂຶ້ນເລັກນ້ອຍ; ຍ້ອນແບບນີ້, "ຄວາມຢຳເກງ" ທີ່ພວກເຈົ້າມີຕໍ່ເຮົາກໍໄດ້ເພີ່ມຂຶ້ນບາງສ່ວນ ແລະ ບໍ່ມີຜູ້ໃດ "ປະຕິບັດຢ່າງຖືເບົາ". ເປັນຫຍັງພວກເຈົ້າຈຶ່ງຢູ່ໃນສະພາວະແຫ່ງຄວາມຂີ້ຄ້ານຢ່າງຕໍ່ເນື່ອງແບບນີ້? ເປັນຫຍັງລັກສະນະດ້ານບວກຈຶ່ງບໍ່ມີໃຫ້ຄົ້ນພົບໃນຕົວພວກເຈົ້າເລີຍ? ໂອ ປະຊາຊົນຂອງເຮົາເອີຍ! ອະດີດໄດ້ຫາຍໄປດົນແລ້ວ; ພວກເຈົ້າຕ້ອງບໍ່ຍຶດຕິດກັບມັນອີກຕໍ່ໄປ. ເມື່ອຍຶດໝັ້ນໄດ້ໃນມື້ວານ, ໃນມື້ນີ້ ເຈົ້າກໍຄວນມອບຄວາມຊື່ສັດທີ່ຈິງໃຈຂອງເຈົ້າໃຫ້ແກ່ເຮົາ; ຍິ່ງໄປກວ່ານັ້ນ ເຈົ້າຄວນເປັນພະຍານທີ່ດີໃຫ້ກັບເຮົາໃນມື້ຕໍ່ໄປ ແລະ ເຈົ້າຈະໄດ້ຮັບພອນຂອງເຮົາໃນອະນາຄົດ. ນີ້ແມ່ນສິ່ງທີ່ພວກເຈົ້າຄວນເຂົ້າໃຈ.

ເຖິງວ່າເຮົາບໍ່ໄດ້ຢູ່ຕໍ່ໜ້າພວກເຈົ້າ, ພຣະວິນຍານຂອງເຮົາກໍຈະມອບຄວາມກະລຸນາໃຫ້ກັບພວກເຈົ້າຢ່າງແນ່ນອນ. ເຮົາຫວັງວ່າພວກເຈົ້າຈະໃຫ້ຄຸນຄ່າພອນຂອງເຮົາ ແລະ ສາມາດຮູ້ຈັກຕົນເອງໂດຍອາໄສພອນເຫຼົ່ານັ້ນ. ຢ່າເຮັດໃຫ້ພອນເຫຼົ່ານັ້ນເປັນຕົ້ນທຶນຂອງພວກເຈົ້າ; ກົງກັນຂ້າມ ພວກເຈົ້າຄວນໃຊ້ພຣະທຳຂອງເຮົາເພື່ອຕື່ມເຕັມສິ່ງທີ່ກຳລັງຂາດໃນຕົວພວກເຈົ້າ ແລະ ພວກເຈົ້າກໍຈະໄດ້ຮັບອົງປະກອບດ້ານບວກຂອງພວກເຈົ້າຈາກສິ່ງນີ້. ນີ້ແມ່ນຂໍ້ຄວາມທີ່ເຮົາໄດ້ມອບເປັນສົມບັດໃຫ້ກັບພວກເຈົ້າ!

ວັນທີ 28 ກຸມພາ 1992

# ບົດທີ 8

ເມື່ອການເປີດເຜີຍຂອງເຮົາເຖິງຈຸດສູງສຸດ ແລະ ເມື່ອການພິພາກສາຂອງເຮົາໃກ້ຈຸດສິ້ນສຸດ, ມັນກໍຈະເປັນເວລາທີ່ປະຊາຊົນຂອງເຮົາທຸກຄົນຖືກເປີດເຜີຍ ແລະ ເຮັດໃຫ້ສົມບູນ. ເຮົາເດີນທາງໄປທຸກແຈມຸມຂອງໂລກຈັກກະວານໃນການຊອກຫາຢ່າງຕໍ່ເນື່ອງເຖິງຜູ້ທີ່ສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ເໝາະສົມສຳລັບການໃຊ້ງານຂອງເຮົາ. ແມ່ນໃຜສາມາດລຸກຂຶ້ນ ແລະ ຮ່ວມມືກັບເຮົາແດ່? ຄວາມຮັກຂອງມະນຸດທີ່ມີຕໍ່ເຮົາແມ່ນໜ້ອຍຫຼາຍ ແລະ ສັດທາຂອງພວກເຂົາທີ່ມີໃນຕົວເຮົາກໍໜ້ອຍຢ່າງເປັນຕາສົມເພດເຊັ່ນກັນ. ຖ້າເຮົາບໍ່ໄດ້ແນການໂຈມຕີດ້ວຍພຣະທຳຂອງເຮົາໃສ່ຈຸດອ່ອນຂອງມະນຸດ ພວກເຂົາກໍຈະໂອ້ອວດ ແລະ ເວົ້າເກີນຄວາມຈິງ, ເວົ້າຂີ້ຕົວະ ແລະ ມີທິດສະດີທີ່ໂອ້ອວດ ຄືກັບວ່າພວກເຂົາຮອບຮູ້ ແລະ ຮູ້ໝົດທຸກຢ່າງ ກ່ຽວກັບບັນຫາທາງແຜ່ນດິນໂລກ. ໃນບັນດາຜູ້ທີ່ "ຈົງຮັກພັກດີ" ຕໍ່ເຮົາໃນອະດີດ ແລະ ໃນບັນດາຜູ້ທີ່ໃນປັດຈຸບັນໄດ້ "ຢືນຢັດ" ຕໍ່ໜ້າເຮົາ ມີໃຜກ້າທີ່ຈະເວົ້າຢ່າງໂອ້ອວດບໍ່? ມີໃຜທີ່ບໍ່ດີໃຈຢ່າງລັບໆສຳລັບໂອກາດຂອງພວກເຂົາເອງບໍ່? ເມື່ອເຮົາບໍ່ໄດ້ເປີດເຜີຍຜູ້ຄົນໂດຍກົງ, ພວກເຂົາກໍຈະບໍ່ມີບ່ອນໃດໃຫ້ລີ້ ແລະ ຈະຖືກທາລຸນດ້ວຍຄວາມອັບອາຍ. ມັນຈະຮຸນແຮງຫຼາຍຂຶ້ນສໍ່າໃດ ຖ້າເຮົາເວົ້າດ້ວຍວິທີອື່ນ? ຜູ້ຄົນຍິ່ງຈະມີຄວາມຮູ້ສຶກເປັນໜີ້ບຸນຄຸນຫຼາຍຂຶ້ນ, ເຊື່ອວ່າບໍ່ມີຫຍັງຈະສາມາດຮັກສາພວກເຂົາໄດ້ ແລະ ທຸກຄົນຈະຖືກຜູກມັດຢ່າງແໜ້ນກັບການຂີ້ຄ້ານຂອງພວກເຂົາ. ເມື່ອຜູ້ຄົນສູນເສຍຄວາມຫວັງ, ການຄຳນັບຂອງອານາຈັກກໍດັງກ້ອງຂຶ້ນຢ່າງເປັນທາງການເຊິ່ງດັ່ງທີ່ຜູ້ຄົນໄດ້ກ່າວໄວ້ວ່າ "ເວລາທີ່ພຣະວິນຍານທີ່ຮຸນແຮງເຈັດເທົ່າໄດ້ເລີ່ມເຮັດພາລະກິດ". ເວົ້າອີກແບບໜຶ່ງກໍຄື ນີ້ແມ່ນເວລາທີ່ຊີວິດຂອງອານາຈັກໄດ້ເລີ່ມຂຶ້ນຢູ່ແຜ່ນດິນໂລກຢ່າງເປັນທາງການ; ມັນແມ່ນເວລາທີ່ຄວາມເປັນພຣະເຈົ້າຂອງເຮົາໄດ້ປາກົດຂຶ້ນ ເພື່ອທຳການໂດຍກົງ (ໂດຍປາສະຈາກ "ການມີ" ແນວຄິດໃດໆ). ທຸກຄົນຟ້າວໄປມາຢ່າງວຸ້ນວາຍ ຄືກັບວ່າ ພວກເຂົາຖືກເຮັດໃຫ້ຟື້ນຂຶ້ນ ຫຼື ປຸກໃຫ້ຕື່ນຈາກຄວາມຝັນ ແລະ ເມື່ອໄດ້ຕື່ນຂຶ້ນມາ ກໍຕົກຕະລຶງທີ່ພົບເຫັນຕົວເອງໃນສະຖານະການດັ່ງກ່າວ. ໃນອະດີດ, ເຮົາໄດ້ເວົ້າຫຼາຍກ່ຽວກັບການສ້າງຄຣິສຕະຈັກ; ເຮົາໄດ້ເປີດເຜີຍຄວາມລຶກລັບຫຼາຍຢ່າງ ແຕ່ເມື່ອພາລະກິດນັ້ນໄດ້ເຖິງຈຸດສູງສຸດຂອງມັນ ມັນກໍໄດ້ສິ້ນສຸດລົງຢ່າງກະທັນຫັນ. ຢ່າງໃດກໍຕາມ, ການສ້າງອານາຈັກນັ້ນແມ່ນມີຄວາມແຕກຕ່າງ. ເມື່ອສົງຄາມໃນໂລກແຫ່ງວິນຍານເຖິງຂັ້ນຕອນສຸດທ້າຍຂອງມັນເທົ່ານັ້ນ ເຮົາຈຶ່ງຈະເລີ່ມພາລະກິດໃໝ່ຂອງເຮົາເທິງແຜ່ນດິນໂລກ. ເວົ້າໄດ້ວ່າ ເມື່ອມະນຸດທຸກຄົນທໍ້ຖອຍເທົ່ານັ້ນ ເຮົາຈຶ່ງຈະເລີ່ມ ແລະ ຍົກພາລະກິດໃໝ່ຂອງເຮົາຂຶ້ນຢ່າງເປັນທາງການ. ຄວາມແຕກຕ່າງລະຫວ່າງການສ້າງອານາຈັກ ແລະ ການສ້າງຄຣິສຕະຈັກກໍຄື ໃນການສ້າງຄຣິສຕະຈັກ ເຮົາໄດ້ເຮັດພາລະກິດຜ່ານຄວາມເປັນມະນຸດ ທີ່ຖືກປົກຄອງດ້ວຍຄວາມເປັນພຣະເຈົ້າ; ເຮົາຈັດການກັບທຳມະຊາດເກົ່າຂອງມະນຸດໂດຍກົງ ໂດຍການເປີດເຜີຍຄວາມຂີ້ຮ້າຍຂອງພວກເຂົາ ແລະ ເປີດໂປງແກ່ນແທ້ຂອງພວກເຂົາໂດຍກົງ. ດ້ວຍເຫດນັ້ນ, ພວກເຂົາຈຶ່ງໄດ້ມາຮູ້ຈັກຕົວເອງບົນພື້ນຖານນີ້, ໄດ້ໝັ້ນໃຈໃນຕົວພວກເຂົາ ແລະ ໃນຄຳເວົ້າຂອງພວກເຂົາ. ໃນການສ້າງອານາຈັກ,

ເຮົາກະທຳການໂດຍກົງຜ່ານຄວາມເປັນພຣະເຈົ້າຂອງເຮົາ ແລະ ເຮັດໃຫ້ທຸກຄົນຮູ້ຈັກສິ່ງທີ່ເຮົາມີ ແລະ ເປັນບົນພື້ນຖານຂອງຄວາມຮູ້ຂອງພວກເຂົາກ່ຽວກັບພຣະທຳຂອງເຮົາ ເຊິ່ງໃນທີ່ສຸດ ກໍຈະເຮັດໃຫ້ພວກເຂົາໄດ້ຮັບຄວາມຮູ້ກ່ຽວກັບເຮົາໃນຖານະທີ່ເປັນເນື້ອໜັງທີ່ບັງເກີດເປັນມະນຸດ. ສຸດທ້າຍກໍຈະເຮັດໃຫ້ການສະແຫວງຫາພຣະເຈົ້າທີ່ເລື່ອນລອຍຂອງມະນຸດທຸກຄົນສິ້ນສຸດລົງ ແລະ ໃນຫົວໃຈຂອງພວກເຂົາ ພວກເຂົາກໍຈະເຊົາເຊື່ອພຣະເຈົ້າໃນສະຫວັນ; ນັ້ນກໍຄື ເຮົາໄດ້ເຮັດໃຫ້ມະນຸດຮູ້ຈັກການກະທຳຂອງເຮົາ ໃນຂະນະທີ່ເຮົາເປັນເນື້ອໜັງທີ່ບັງເກີດເປັນມະນຸດ ແລະ ດ້ວຍເຫດນັ້ນ ເວລາຂອງເຮົາເທິງແຜ່ນດິນໂລກກໍຈະສິ້ນສຸດລົງ.

ການສ້າງອານາຈັກແມ່ນແນໃສ່ໂລກແຫ່ງວິນຍານໂດຍກົງ. ນັ້ນກໍຄື ສະພາບຂອງການຕໍ່ສູ້ຂອງໂລກແຫ່ງວິນຍານແມ່ນຖືກອະທິບາຍຢ່າງລະອຽດໂດຍກົງໃນທ່າມກາງປະຊາຊົນຂອງເຮົາທຸກຄົນ ແລະ ນີ້ກໍພຽງພໍທີ່ຈະສະແດງໃຫ້ເຫັນວ່າ ບໍ່ພຽງແຕ່ໃນຄຣິສຕະຈັກເທົ່ານັ້ນ ແຕ່ຍັງມີ ແລະ ຍິ່ງມີໃນຍຸກແຫ່ງອານາຈັກທີ່ທຸກຄົນສູ້ຮົບຢ່າງຕໍ່ເນື່ອງ. ເຖິງຈະເປັນຮ່າງກາຍຂອງພວກເຂົາ ແຕ່ໂລກແຫ່ງວິນຍານກໍຖືກເປີດເຜີຍໂດຍກົງ ແລະ ພວກເຂົາແມ່ນໄດ້ມາພົວພັນກັບຊີວິດຂອງໂລກແຫ່ງວິນຍານ. ສະນັ້ນ, ເມື່ອພວກເຈົ້າເລີ່ມມີຄວາມເຊື່ອ, ພວກເຈົ້າກໍຕ້ອງຕຽມຢ່າງຖືກຕ້ອງເພື່ອຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ. ພວກເຈົ້າຄວນມອບຫົວໃຈທັງໝົດຂອງພວກເຈົ້າ; ພຽງເມື່ອນັ້ນ ພວກເຈົ້າຈຶ່ງຈະສາມາດເຮັດໃຫ້ເຮົາພໍໃຈ. ເຮົາບໍ່ສົນໃຈກັບສິ່ງເກີດຂຶ້ນທີ່ຜ່ານມາໃນຄຣິສຕະຈັກ; ໃນປັດຈຸບັນ ມັນແມ່ນຢູ່ໃນອານາຈັກ. ໃນແຜນການຂອງເຮົາ, ຊາຕານໄດ້ຍ່າງຢູ່ດ້ານຫຼັງທຸກບາດກ້າວຢ່າງມີດຽງບມາຕະຫຼອດ ແລະ ໃນຖານະທີ່ມັນເປັນຜູ້ຂັດຂວາງສະຕິປັນຍາຂອງເຮົາ ມັນໄດ້ພະຍາຍາມຊອກຫາວິທີທາງ ແລະ ວິທີການເພື່ອຂັດຂວາງແຜນການດັ່ງເດີມຂອງເຮົາຕະຫຼອດ. ແຕ່ເຮົາຈະສາມາດຍອມຈຳນົນຕໍ່ແຜນການອຸບາຍຂອງມັນໄດ້ບໍ? ທຸກຢ່າງຢູ່ສະຫວັນ ແລະ ແຜ່ນດິນໂລກແມ່ນຮັບໃຊ້ເຮົາ; ແຜນການອຸບາຍຂອງຊາຕານຈະມີຄວາມແຕກຕ່າງບໍ? ນີ້ແມ່ນຈຸດທີ່ສະຕິປັນຍາຂອງເຮົາຕັດຜ່ານຢ່າງແນ່ນອນ; ມັນແມ່ນສິ່ງທີ່ມະຫັດສະຈັນກ່ຽວກັບການກະທຳຂອງເຮົາ ແລະ ມັນແມ່ນຫຼັກການຂອງການປະຕິບັດແຜນການຄຸ້ມຄອງທັງໝົດຂອງເຮົາ. ໃນຍຸກແຫ່ງການສ້າງອານາຈັກ, ເຮົາກໍຍັງບໍ່ຖືກລະເວັ້ນດ້ວຍແຜນການອຸບາຍຂອງຊາຕານ ແຕ່ເຮົາສືບຕໍ່ເຮັດພາລະກິດທີ່ເຮົາຕ້ອງເຮັດ. ໃນທ່າມກາງຈັກກະວານ ແລະ ທຸກສິ່ງ, ເຮົາໄດ້ເລືອກການກະທຳຂອງຊາຕານເປັນສິ່ງກີດຂວາງຂອງເຮົາ. ນີ້ບໍ່ແມ່ນການສະແດງອອກຂອງສະຕິປັນຍາຂອງເຮົາບໍ? ນີ້ບໍ່ແມ່ນສິ່ງທີ່ມະຫັດສະຈັນຢ່າງແທ້ຈິງກ່ຽວກັບສະຕິປັນຍາຂອງເຮົາບໍ? ເນື່ອງໃນໂອກາດການເຂົ້າສູ່ຍຸກແຫ່ງອານາຈັກ, ທຸກສິ່ງຢູ່ສະຫວັນ ແລະ ແຜ່ນດິນໂລກແມ່ນຖືກປ່ຽນແປງຢ່າງສິ້ນເຊີງ, ສິ່ງເຫຼົ່ານັ້ນພາກັນສະເຫຼີມສະຫຼອງ ແລະ ປິຕິຍິນດີຢ່າງຍິ່ງ. ພວກເຈົ້າແຕກຕ່າງບໍ? ໃນຫົວໃຈຂອງໃຜທີ່ບໍ່ມີຄວາມຫວານຂອງນໍ້າເຜິ້ງແດ່? ແມ່ນໃຜທີ່ບໍ່ມີຄວາມສຸກແດ່? ແມ່ນໃຜທີ່ບໍ່ເຕັ້ນລຳດ້ວຍຄວາມດີໃຈ? ແມ່ນໃຜທີ່ບໍ່ກ່າວຄຳສັນລະເສີນ?

ພວກເຈົ້າເຂົ້າໃຈເປົ້າໝາຍ ແລະ ຕົ້ນກຳເນີດຂອງທຸກສິ່ງທີ່ເຮົາໄດ້ເວົ້າເຖິງ ແລະ ສົນທະນາຢູ່ຂ້າງເທິງນີ້ບໍ ຫຼື ພວກເຈົ້າບໍ່ເຂົ້າໃຈ? ຖ້າເຮົາບໍ່ຖາມສິ່ງນີ້ ແລ້ວຄົນສ່ວນໃຫຍ່ກໍຈະເຊື່ອວ່າ ເຮົາພຽງແຕ່ເວົ້າ

ຢ່າງໄຮ້ສາລະ ແລະ ຈະບໍ່ສາມາດຢັ່ງເຖິງແຫຼ່ງທີ່ມາຂອງພຣະທຳຂອງເຮົາ. ຖ້າພວກເຈົ້າພິຈາລະນາສິ່ງເຫຼົ່ານັ້ນຢ່າງລະອຽດ ພວກເຈົ້າຈະຮູ້ເຖິງຄວາມສຳຄັນຂອງສິ່ງເຫຼົ່ານັ້ນ. ເຈົ້າຈະເຂົ້າໃຈໄດ້ດີຖ້າເຈົ້າອ່ານສິ່ງເຫຼົ່ານັ້ນຢ່າງໃກ້ຊິດ: ພຣະທຳຂອງເຮົາຂໍ້ໃດທີ່ບໍ່ເປັນປະໂຫຍດແກ່ເຈົ້າແດ່? ຂໍ້ໃດທີ່ບໍ່ໄດ້ມີຄວາມໝາຍທີ່ເຮັດໃຫ້ຊີວິດຂອງເຈົ້າເຕີບໃຫຍ່ແດ່? ຂໍ້ໃດທີ່ບໍ່ເວົ້າເຖິງຄວາມເປັນຈິງຂອງໂລກແຫ່ງວິນຍານແດ່? ຄົນສ່ວນໃຫຍ່ເຊື່ອວ່າ ບໍ່ມີຄວາມຄ່ອງກັນ ຫຼື ເຫດຜົນໃນພຣະທຳຂອງເຮົາ ວ່າພວກມັນຂາດການອະທິບາຍ ແລະ ການຕີຄວາມໝາຍ. ພຣະທຳຂອງເຮົາເປັນທິດສະດີ ແລະ ບໍ່ສາມາດຢັ່ງຮູ້ແທ້ບໍ? ພວກເຈົ້າອ່ອນນ້ອມຕໍ່ພຣະທຳຂອງເຮົາຢ່າງແທ້ຈິງບໍ? ພວກເຈົ້າຍອມຮັບເອົາພຣະທຳຂອງເຮົາແທ້ບໍ? ພວກເຈົ້າບໍ່ໄດ້ປະຕິບັດກັບສິ່ງເຫຼົ່ານັ້ນຄືກັບຂອງຫຼິ້ນບໍ? ເຈົ້າບໍ່ໄດ້ໃຊ້ສິ່ງເຫຼົ່ານັ້ນເປັນເຄື່ອງນຸ່ງເພື່ອປົກປິດຮູບລັກອັນຂີ້ຮ້າຍຂອງເຈົ້າບໍ? ໃນໂລກທີ່ກວ້າງໃຫຍ່ໄພສານນີ້, ແມ່ນໃຜທີ່ຖືກເຮົາກວດສອບດ້ວຍຕົວເອງແດ່? ມີໃຜໄດ້ຍິນພຣະທຳຂອງພຣະວິນຍານຂອງເຮົາດ້ວຍຕົວເອງບໍ່? ຫຼາຍຄົນຊອກຫາ ແລະ ຄົ້ນຫາຢູ່ໃນຄວາມມືດ; ຫຼາຍຄົນອະທິຖານໃນທ່າມກາງຄວາມລຳບາກຍາກແຄ້ນ; ຫຼາຍຄົນຫິວ ແລະ ໜາວ, ແນມເບິ່ງດ້ວຍຄວາມສິ້ນຫວັງ; ແລະ ຫຼາຍຄົນຖືກຊາຕານຜູກມັດ; ແຕ່ຫຼາຍຄົນກໍບໍ່ຮູ້ວ່າຈະຫັນໄປບ່ອນໃດ, ຫຼາຍຄົນໄດ້ທໍລະຍົດເຮົາໃນທ່າມກາງຄວາມສຸກຂອງພວກເຂົາ, ຫຼາຍຄົນບໍ່ຮູ້ບຸນຄຸນ ແລະ ຫຼາຍຄົນຈົງຮັກພັກດີຕໍ່ແຜນການອຸບາຍຂອງຊາຕານ. ແມ່ນໃຜໃນບັນດາພວກເຈົ້າທີ່ແມ່ນໂຢບ? ແມ່ນໃຜແມ່ນເປໂຕ? ເປັນຫຍັງເຮົາຈຶ່ງກ່າວເຖິງໂຢບຊໍ້າແລ້ວຊໍ້າອີກ? ເປັນຫຍັງເຮົາຈຶ່ງເວົ້າເຖິງເປໂຕຫຼາຍຄັ້ງ? ພວກເຈົ້າເຄີຍຄົ້ນຫາບໍວ່າ ຄວາມຫວັງຂອງເຮົາທີ່ມີຕໍ່ພວກເຈົ້າແມ່ນຫຍັງ? ພວກເຈົ້າຄວນໃຊ້ເວລາໃນການພິຈາລະນາສິ່ງດັ່ງກ່າວນີ້ຫຼາຍຂຶ້ນ.

ເປໂຕມີສັດທາຕໍ່ເຮົາເປັນເວລາຫຼາຍປີ ແຕ່ລາວບໍ່ເຄີຍຈົ່ມ ແລະ ບໍ່ເຄີຍມີຄວາມບໍ່ພໍໃຈ; ແມ່ນແຕ່ໂຢບກໍບໍ່ທຽບເທົ່າກັບລາວ ແລະ ຕະຫຼອດຍຸກຕ່າງໆ ພວກນັກບຸນກໍບໍ່ທຽບເທົ່າເປໂຕ. ລາວບໍ່ພຽງແຕ່ສະແຫວງຫາທີ່ຈະຮູ້ຈັກເຮົາ ແຕ່ຍັງມາຮູ້ຈັກເຮົາໃນຊ່ວງເວລາທີ່ຊາຕານສະແດງແຜນການອຸບາຍຂອງມັນ. ສິ່ງນີ້ເຮັດໃຫ້ເປໂຕຮັບໃຊ້ເຮົາເປັນເວລາຫຼາຍປີ ໂດຍສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ຍ້ອນເຫດຜົນນີ້ ລາວຈຶ່ງບໍ່ເຄີຍຖືກຊາຕານຫຼອກໃຊ້. ເປໂຕຖອດເອົາບົດຮຽນຈາກຄວາມເຊື່ອຂອງໂຢບ ແຕ່ກໍຍັງເຂົ້າໃຈຄວາມບົກຜ່ອງຂອງໂຢບໄດ້ຢ່າງຊັດເຈນ. ເຖິງໂຢບຈະມີຄວາມເຊື່ອອັນຍິ່ງໃຫຍ່ ແຕ່ລາວກໍຂາດຄວາມຮູ້ກ່ຽວກັບບັນຫາໃນໂລກແຫ່ງວິນຍານ ເຊິ່ງດ້ວຍເຫດນັ້ນ ລາວຈຶ່ງເວົ້າຫຼາຍຄຳທີ່ບໍ່ສອດຄ່ອງກັບຄວາມເປັນຈິງ; ນີ້ສະແດງໃຫ້ເຫັນວ່າ ຄວາມຮູ້ຂອງໂຢບນັ້ນຕື້ນ ແລະ ບໍ່ສາມາດເຮັດໃຫ້ສົມບູນໄດ້. ດັ່ງນັ້ນ, ເປໂຕຈຶ່ງສຸມໃສ່ການຮັບຄວາມຮູ້ສຶກແຫ່ງວິນຍານຕະຫຼອດ ແລະ ເອົາໃຈໃສ່ກັບການສັງເກດເບິ່ງພະລັງຂອງໂລກແຫ່ງວິນຍານ. ດ້ວຍເຫດນັ້ນ, ລາວບໍ່ພຽງແຕ່ສາມາດຄົ້ນຫາບາງສິ່ງທີ່ເຮົາປາດຖະໜາເທົ່ານັ້ນ ແຕ່ຍັງມີຄວາມຮູ້ເລັກນ້ອຍກ່ຽວກັບແຜນການອຸບາຍຂອງຊາຕານ. ຍ້ອນສິ່ງນີ້ ຄວາມຮູ້ຂອງລາວກ່ຽວກັບເຮົາຈຶ່ງມີຫຼາຍກວ່າຄົນອື່ນຕະຫຼອດຍຸກຕ່າງໆ.

ຈາກປະສົບການຂອງເປໂຕ, ມັນບໍ່ຍາກທີ່ຈະເຫັນວ່າ ຖ້າມະນຸດປາດຖະໜາທີ່ຈະຮູ້ຈັກເຮົາ ພວກເຂົາຕ້ອງສຸມໃສ່ກັບການພິຈາລະນາຢ່າງລະອຽດພາຍໃນຈິດວິນຍານຂອງພວກເຂົາ. ເຮົາບໍ່ໄດ້ຂໍ

ໃຫ້ເຈົ້າ "ອຸທິດ" ດ້ານພາຍນອກບາງສ່ວນໃຫ້ກັບເຮົາ; ນີ້ແມ່ນເລື່ອງສຳຮອງ. ຖ້າເຈົ້າບໍ່ຮູ້ຈັກເຮົາ ແລ້ວຄວາມເຊື່ອ, ຄວາມຮັກ ແລະ ຄວາມຈົງຮັກພັກດີທັງໝົດ ທີ່ເຈົ້າເວົ້າເຖິງກໍຈະເປັນຄວາມເພີ້ຝັນ; ສິ່ງເຫຼົ່ານັ້ນແມ່ນສິ່ງທີ່ບໍ່ມີສາລະ ແລະ ເຈົ້າກໍຈະກາຍເປັນຄົນທີ່ໂອ້ອວດຕໍ່ໜ້າເຮົາ ແຕ່ບໍ່ຮູ້ຈັກຕົວເອງຢ່າງແນ່ນອນ. ແລ້ວເຈົ້າກໍຈະຕິດກັບດັກຂອງຊາຕານອີກຄັ້ງ ແລະ ຈະບໍ່ສາມາດປົດປ່ອຍຕົວເອງໄດ້; ເຈົ້າຈະກາຍເປັນບຸດແຫ່ງອະເວຈີ ແລະ ເປັນສິ່ງທີ່ຕ້ອງຖືກທຳລາຍ. ຢ່າງໃດກໍຕາມ, ຖ້າເຈົ້າເຢັນຊາ ແລະ ບໍ່ໃສ່ໃຈກັບພຣະທຳຂອງເຮົາ ເຈົ້າກໍຈະຕໍ່ຕ້ານເຮົາໂດຍທີ່ບໍ່ຕ້ອງສົງໄສເລີຍ. ນີ້ແມ່ນຄວາມຈິງ ແລະ ເຈົ້າຈະເຮັດໄດ້ດີຖ້າເຈົ້າໄດ້ເບິ່ງວິນຍານທັງຫຼາຍ ແລະ ຕ່າງໆນາໆ ທີ່ຖືກເຮົາຂ້ຽນຕີ ຜ່ານປະຕູໂຂງຂອງໂລກແຫ່ງວິນຍານ. ໃນບັນດາພວກເຂົາ ແມ່ນມີວິນຍານໃດທີ່ໄດ້ພະເຊີນກັບພຣະທຳຂອງເຮົາ ແລ້ວນິ້ງເສີຍ, ບໍ່ໃສ່ໃຈ ແລະ ບໍ່ຍອມຮັບ? ໃນບັນດາພວກເຂົາ ມີວິນຍານໃດທີ່ບໍ່ເຍາະເຍີ້ຍພຣະທຳຂອງເຮົາ? ໃນບັນດາພວກເຂົາ ມີວິນຍານໃດທີ່ບໍ່ໄດ້ພະຍາຍາມທີ່ຈະຊອກຫາຄວາມຜິດໃນພຣະທຳຂອງເຮົາ? ໃນບັນດາພວກເຂົາ ມີວິນຍານໃດທີ່ບໍ່ໄດ້ໃຊ້ພຣະທຳຂອງເຮົາເປັນ "ອາວຸດປ້ອງກັນ" ເພື່ອ "ປົກປ້ອງ" ຕົວເອງ? ພວກເຂົາບໍ່ໄດ້ໃຊ້ເນື້ອຫາຂອງພຣະທຳຂອງເຮົາເປັນວິທີທາງໃນການຮູ້ຈັກເຮົາ ແຕ່ພຽງເປັນຂອງຫຼິ້ນເພື່ອຫຼິ້ນນຳ. ໃນສິ່ງນີ້ ພວກເຂົາບໍ່ໄດ້ຂັດຂືນເຮົາໂດຍກົງບໍ? ພຣະທຳຂອງເຮົາແມ່ນເພື່ອໃຜ? ໃຜຄືພຣະວິນຍານຂອງເຮົາ? ເຮົາໄດ້ຖາມຄຳຖາມດັ່ງກ່າວກັບພວກເຈົ້າຫຼາຍຄັ້ງ, ແຕ່ເຈົ້າໄດ້ຮັບຄວາມເຂົ້າໃຈທີ່ສູງສົ່ງຂຶ້ນ ແລະ ຊັດເຈນກ່ຽວກັບສິ່ງເຫຼົ່ານັ້ນ? ພວກເຈົ້າເຄີຍປະສົບກັບສິ່ງເຫຼົ່ານັ້ນຢ່າງແທ້ຈິງບໍ? ເຮົາຂໍເຕືອນພວກເຈົ້າອີກຄັ້ງ: ຖ້າພວກເຈົ້າບໍ່ຮູ້ຈັກພຣະທຳຂອງເຮົາ ແລະ ບໍ່ຍອມຮັບພວກມັນ ແລະ ເອົາພວກມັນມາປະຕິບັດ, ພວກເຈົ້າກໍຈະກາຍເປັນເປົ້າໝາຍແຫ່ງການຂ້ຽນຕີຂອງເຮົາຢ່າງຫຼີກເວັ້ນບໍ່ໄດ້! ພວກເຈົ້າຈະກາຍເປັນເຫຍື່ອຂອງຊາຕານຢ່າງແນ່ນອນ!

ວັນທີ 29 ກຸມພາ 1992

# ບົດທີ 9

ໃນເມື່ອເຈົ້າຢູ່ໃນທ່າມກາງຜູ້ຄົນຂອງຄົວເຮືອນຂອງເຮົາ ແລະ ໃນເມື່ອເຈົ້າຈິງຮັກພັກດີໃນອານາຈັກຂອງເຮົາ ເຈົ້າກໍຕ້ອງຍຶດໝັ້ນກັບມາດຕະຖານຂອງຄວາມຕ້ອງການຂອງເຮົາ ໃນທຸກສິ່ງທີ່ເຈົ້າເຮັດ. ເຮົາບໍ່ໄດ້ຂໍໃຫ້ເຈົ້າເປັນຫຍັງຫຼາຍໄປກວ່າເມກທີ່ລ່ອງລອຍ ແຕ່ຂໍໃຫ້ເຈົ້າເປັນແສງຫິມະອ່ອນໆ ແລະ ມີແກ່ນແທ້ຂອງມັນ ແລະ ຍິ່ງໄປກວ່ານັ້ນກໍແມ່ນຄຸນຄ່າຂອງມັນ. ຍ້ອນເຮົາມາຈາກດິນແດນທີ່ບໍລິສຸດ, ເຮົາຈຶ່ງບໍ່ຄືກັນກັບດອກບົວ ເຊິ່ງມີແຕ່ຊື່ເທົ່ານັ້ນ ແລະ ບໍ່ມີແກ່ນແທ້ ເນື່ອງຈາກມັນມາຈາກບຶງ ແລະ ບໍ່ແມ່ນດິນແດນທີ່ບໍລິສຸດ. ເວລາທີ່ສະຫວັນໃໝ່ສະເດັດລົງມາແຜ່ນດິນໂລກ ແລະ ແຜນດິນໂລກໃໝ່ຂະຫຍາຍອອກໄປທົ່ວທ້ອງຟ້າ ແນ່ນອນ ຍັງແມ່ນເວລາທີ່ເຮົາເຮັດພາລະກິດຢ່າງເປັນທາງການໃນທ່າມກາງມະນຸດ. ແມ່ນໃຜໃນທ່າມກາງມະນຸດທີ່ຮູ້ຈັກເຮົາແດ່? ແມ່ນໃຜໄດ້ເຫັນຊ່ວງເວລາທີ່ເຮົາໄດ້ມາເຖິງບໍ່? ແມ່ນໃຜທີ່ເຫັນວ່າເຮົາບໍ່ພຽງແຕ່ມີຊື່ ແຕ່ຍິ່ງໄປກວ່ານັ້ນ ແມ່ນຍັງມີແກ່ນແທ້ນຳ? ເຮົາກວາດເມກສີຂາວຖິ້ມດ້ວຍມືຂອງເຮົາ ແລະ ສັງເກດເບິ່ງທ້ອງຟ້າຢ່າງໃກ້ຊິດ; ບໍ່ມີຫຍັງໃນອາວະກາດທີ່ບໍ່ໄດ້ຖືກຈັດກຽມດ້ວຍມືຂອງເຮົາ ແລະ ຢູ່ທາງລຸ່ມຂອງມັນກໍບໍ່ມີຜູ້ໃດທີ່ບໍ່ປະກອບຄວາມພະຍາຍາມເລັກນ້ອຍຂອງເຂົາຕໍ່ຄວາມສຳເລັດຂອງກິດຈະການອັນຍິ່ງໃຫຍ່ຂອງເຮົາ. ເຮົາບໍ່ເຮັດການຮຽກຮ້ອງທີ່ຍາກລຳບາກຈາກຜູ້ຄົນຢູ່ເທິງແຜ່ນດິນໂລກ ເນື່ອງຈາກວ່າ ເຮົາແມ່ນພຣະເຈົ້າແຫ່ງຄວາມຈິງຕະຫຼອດເວລາ ແລະ ຍ້ອນເຮົາແມ່ນອົງຊົງລິດທານຸພາບສູງສຸດ ທີ່ໄດ້ສ້າງມະນຸດ ແລະ ຮູ້ຈັກພວກເຂົາເປັນຢ່າງດີ. ທຸກຄົນແມ່ນຢູ່ພາຍໃຕ້ສາຍຕາຂອງອົງຊົງລິດທານຸພາບສູງສຸດ. ຜູ້ທີ່ຢູ່ໃນແຈມຸມໄກສຸດຂອງແຜ່ນດິນໂລກຈະສາມາດຫຼີກເວັ້ນການກວດສອບຢ່າງລະອຽດຂອງພຣະວິນຍານຂອງເຮົາໄດ້ແນວໃດ? ເຖິງວ່າຜູ້ຄົນຈະ “ຮູ້ຈັກ” ພຣະວິນຍານຂອງເຮົາ ແຕ່ພວກເຂົາກໍຍັງລ່ວງເກີນພຣະວິນຍານຂອງເຮົາ. ພຣະທຳຂອງເຮົາເປີດເຜີຍໃບໜ້າອັນຂີ້ຮ້າຍຂອງທຸກຄົນ ພ້ອມກັບຄວາມຄິດໃນສ່ວນເລິກຂອງຫົວໃຈຂອງພວກເຂົາ ແລະ ເຮັດໃຫ້ທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກຖືກເຮັດໃຫ້ແຈ້ງຂຶ້ນດ້ວຍແສງສະຫວ່າງຂອງເຮົາ ແລະ ລົ້ມລົງໃນທ່າມກາງຄວາມກວດສອບຂອງເຮົາ. ຢ່າງໃດກໍຕາມ, ເຖິງຈະລົ້ມລົງ ແຕ່ໃຈຂອງພວກເຂົາກໍບໍ່ກ້າທີ່ຈະຫຼົງທາງຈາກເຮົາ. ໃນທ່າມກາງວັດຖຸຂອງການຊົງສ້າງ, ມີໃຜແດ່ທີ່ບໍ່ຮັກເຮົາ ຍ້ອນການກະທຳຂອງເຮົາ? ແມ່ນໃຜທີ່ບໍ່ປາດຖະໜາເຖິງເຮົາຍ້ອນພຣະທຳຂອງເຮົາ? ໃນຜູ້ໃດທີ່ບໍ່ເກີດມີຄວາມຮູ້ສຶກຍຶດຕິດ ຍ້ອນຄວາມຮັກຂອງເຮົາ? ເນື່ອງຈາກຄວາມເສື່ອມຊາມຂອງຊາຕານເທົ່ານັ້ນ ມະນຸດຈຶ່ງບໍ່ສາມາດໄປຮອດສະພາບທີ່ເຮົາຕ້ອງການ. ແມ່ນແຕ່ມາດຕະຖານທີ່ຕໍ່າສຸດທີ່ເຮົາຮຽກຮ້ອງກໍຍັງເຮັດໃຫ້ຜູ້ຄົນມີຄວາມສົງໄສ, ແລ້ວນັບພາສາຫຍັງໃນປັດຈຸບັນ ເຊິ່ງເປັນຍຸກທີ່ຊາຕານສ້າງຄວາມວຸ້ນວາຍ ແລະ ກົດຂີ່ຂົ່ມເຫັງຢ່າງບ້າປ່ວງ ຫຼື ເປັນຊ່ວງເວລາທີ່ມະນຸດຖືກຊາຕານຢຽບຢໍ່າ ຈົນຮ່າງກາຍທັງໝົດຂອງພວກເຂົາເລະໃນຂີ້ຕົມ. ມີເວລາໃດທີ່ຄວາມລົ້ມເຫຼວຂອງມະນຸດ ໃນການເບິ່ງແຍງຫົວໃຈຂອງເຮົາ ອັນເນື່ອງມາຈາກຄວາມຊົ່ວຊ້າຂອງພວກເຂົາບໍ່ໄດ້ເຮັດໃຫ້ເຮົາໂສກເສົ້າແດ່? ເປັນໄປໄດ້ບໍ ທີ່ເຮົາມີຄວາມສົງສານຊາຕານ? ເປັນໄປໄດ້ບໍ ທີ່ເຮົາ

ເຂົ້າໃຈຜິດໃນຄວາມຮັກຂອງເຮົາ? ເມື່ອຜູ້ຄົນບໍ່ເຊື່ອຟັງເຮົາ ໃຈຂອງເຮົາກໍຮ້ອງໄຫ້ຢ່າງລັບໆ; ເມື່ອພວກເຂົາຕໍ່ຕ້ານເຮົາ ເຮົາກໍຂ້ຽນຕີພວກເຂົາ; ເມື່ອພວກເຂົາຖືກເຮົາຊ່ວຍໃຫ້ລອດ ແລະ ຖືກເຮັດໃຫ້ຟື້ນຄືນຊີບຈາກຄວາມຕາຍ ເຮົາກໍລໍ່ລ້ຽງພວກເຂົາດ້ວຍການເບິ່ງແຍງຢ່າງດີທີ່ສຸດ; ເມື່ອພວກເຂົາອ່ອນນ້ອມກັບເຮົາ ໃຈຂອງເຮົາກໍພັກຜ່ອນໄດ້ຢ່າງສະບາຍ ແລະ ເຮົາກໍຮູ້ສຶກເຖິງການປ່ຽນແປງໃນສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທັນທີ. ເມື່ອມະນຸດສັນລະເສີນເຮົາ ແລ້ວເຮົາຈະບໍ່ມີຄວາມສຸກກັບສິ່ງນັ້ນໄດ້ແນວໃດ? ເມື່ອພວກເຂົາເປັນພະຍານໃຫ້ກັບເຮົາ ແລະ ຖືກເຮົາຮັບເອົາ, ເຮົາຈະບໍ່ໄດ້ຮັບສະຫງ່າລາສີໄດ້ແນວໃດ? ເປັນໄປໄດ້ບໍວ່າ ການທີ່ມະນຸດຈະກະທຳ ແລະ ປະພຶດແມ່ນບໍ່ໄດ້ຖືກຄວບຄຸມ ແລະ ສະໜອງໂດຍເຮົາ? ເມື່ອເຮົາບໍ່ສະໜອງທິດຊີ້ນຳໃຫ້, ຜູ້ຄົນກໍຈະຢູ່ລ້າໆ ແລະ ບໍ່ເຮັດຫຍັງ; ຍິ່ງໄປກວ່ານັ້ນ, ລັບຫຼັງເຮົາ ພວກເຂົາກໍຈະພາກັນເຮັດກິດຈະການສົກກະປົກທີ່ “ເປັນຕາສັນລະເສີນ”. ເຈົ້າຄິດວ່າເນື້ອໜັງທີ່ເຮົາໃຊ້ຫໍ່ຫຸ້ມຕົວເອງແມ່ນບໍ່ຮູ້ຫຍັງກ່ຽວກັບການກະທຳ, ພຶດຕິກຳ ແລະ ຄຳເວົ້າຂອງເຈົ້າບໍ? ເຮົາໄດ້ທົນຕໍ່ລົມ ແລະ ຝົນເປັນເວລາຫຼາຍປີ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ປະສົບກັບຄວາມຂົມຂື່ນຂອງໂລກມະນຸດ; ຢ່າງໃດກໍຕາມ, ເມື່ອສະທ້ອນເບິ່ງຢ່າງໃກ້ຊິດແລ້ວ, ບໍ່ມີການທົນທຸກໃນຈຳນວນໃດ ທີ່ສາມາດເຮັດໃຫ້ມະນຸດທີ່ຢູ່ໃນເນື້ອໜັງສູນເສຍຄວາມຫວັງໃນຕົວເຮົາເລີຍ, ແລ້ວແຮງໄກທີ່ຄວາມຫວານຈະສາມາດເຮັດໃຫ້ມະນຸດທີ່ຢູ່ໃນເນື້ອໜັງເຢັນຊາ, ທໍ້ແທ້ ຫຼື ປະຕິເສດເຮົາ. ຄວາມຮັກຂອງພວກເຂົາ ທີ່ມີຕໍ່ເຮົາແມ່ນຖືກຈຳກັດຢູ່ທີ່ການຂາດຄວາມທຸກ ຫຼື ການຂາດຄວາມຫວານແທ້ບໍ?

ໃນປັດຈຸບັນ ເຮົາອາໄສຢູ່ໃນເນື້ອໜັງ ແລະ ໄດ້ເລີ່ມປະຕິບັດພາລະກິດທີ່ເຮົາຕ້ອງເຮັດຢ່າງເປັນທາງການ. ເຖິງມະນຸດຈະຢ້ານສຽງຂອງພຣະວິນຍານຂອງເຮົາ ແຕ່ພວກເຂົາກໍຍັງຕໍ່ຕ້ານແກ່ນແທ້ຂອງພຣະວິນຍານຂອງເຮົາ. ເຮົາບໍ່ຈຳເປັນຕ້ອງອະທິບາຍຢ່າງລະອຽດວ່າ ມັນຍາກສໍ່າໃດ ສຳລັບມະນຸດທີ່ຈະຮູ້ຈັກເຮົາທີ່ຢູ່ໃນເນື້ອໜັງໃນພຣະທຳຂອງເຮົາ. ດັ່ງທີ່ເຮົາໄດ້ເວົ້າມາກ່ອນແລ້ວ, ເຮົາບໍ່ໄດ້ຮຽກຮ້ອງຫຼາຍໃນຄວາມຕ້ອງການຂອງເຮົາ ແລະ ມັນບໍ່ຈຳເປັນທີ່ພວກເຈົ້າຈະຕ້ອງໄດ້ຮັບຄວາມຮູ້ຢ່າງຄົບຖ້ວນກ່ຽວກັບເຮົາ (ເນື່ອງຈາກມະນຸດຂາດແຄນ; ນີ້ແມ່ນສະພາບການໂດຍທຳມະຊາດ ແລະ ບໍ່ມີສະພາບການໃດທີ່ໄດ້ມາ ຈະສາມາດທົດແທນສິ່ງນີ້ໄດ້). ພວກເຈົ້າບໍ່ຈຳເປັນຕ້ອງຮູ້ຈັກທຸກສິ່ງທີ່ເຮົາເຮັດ ແລະ ເວົ້າໃນຮູບຮ່າງທີ່ເປັນເນື້ອໜັງ. ໃນເມື່ອຄວາມຕ້ອງການຂອງເຮົາບໍ່ໄດ້ຮຽກຮ້ອງຫຼາຍ, ມັນຈຶ່ງເປັນຄວາມຫວັງຂອງເຮົາ ທີ່ພວກເຈົ້າທຸກຄົນຈະສາມາດມາຮູ້ຈັກການກະທຳ ແລະ ພຣະທຳເຫຼົ່ານີ້ ແລະ ໄດ້ຮັບການບັນລຸຜົນ. ພວກເຈົ້າຕ້ອງກຳຈັດຄວາມບໍ່ບໍລິສຸດຂອງພວກເຈົ້າອອກຈາກຕົວຂອງພວກເຈົ້າໃນໂລກທີ່ສົກກະປົກນີ້, ພວກເຈົ້າຕ້ອງພະຍາຍາມກ້າວໜ້າໃນ “ຄອບຄົວຂອງຈັກກະພັດ” ທີ່ຫຼ້າຫຼັງນີ້ ແລະ ພວກເຈົ້າຫ້າມເຮັດໃຫ້ຕົວເອງຂີ້ຄ້ານ. ເຈົ້າບໍ່ຄວນຜ່ອນຜັນກັບຕົວເອງແມ່ນແຕ່ໜ້ອຍດຽວ. ເຈົ້າຈຳເປັນຕ້ອງອຸທິດເວລາ ແລະ ຄວາມພະຍາຍາມຢ່າງມະຫາສານ ເພື່ອຮູ້ຈັກສິ່ງທີ່ເຮົາກ່າວໃນມື້ໜຶ່ງ ແລະ ມັນຈະຕ້ອງໄດ້ໃຊ້ເວລາທັງຊີວິດເພື່ອເຮົາເອົາປະສົບການ ແລະ ຄວາມຮູ້ຈາກພຽງປະໂຫຍກດຽວທີ່ເຮົາກ່າວ. ພຣະທຳທີ່ເຮົາກ່າວແມ່ນບໍ່ໄດ້ເລື່ອນລອຍ ແລະ ບໍ່ແມ່ນທິດສະດີ; ພຣະທຳເຫຼົ່ານັ້ນບໍ່ແມ່ນການເວົ້າທີ່ວ່າງເປົ່າ. ຫຼາຍຄົນຫວັງທີ່ຈະໄດ້ຮັບພຣະທຳຂອງເຮົາ ແຕ່ເຮົາບໍ່ສົນໃຈພວກເຂົາ; ຫຼາຍຄົນ

ກະຫາຍທີ່ຈະໄດ້ຄວາມອຸດົມສົມບູນຂອງເຮົາແຕ່ເຮົາບໍ່ມອບໃຫ້ພວກເຂົາແມ່ນແຕ່ໜ້ອຍດຽວ; ຫຼາຍຄົນປາດຖະໜາທີ່ຈະເຫັນໜ້າເຮົາ ແຕ່ເຮົາກໍເຊື່ອງໜ້າເຮົາໄວ້; ຫຼາຍຄົນຕັ້ງໃຈຟັງສຽງຂອງເຮົາ ແຕ່ເຮົາກໍປິດຕາຂອງເຮົາ ແລະ ຫງ່ຽງຫົວຂອງເຮົາໄປທາງຂ້າງ ໂດຍບໍ່ມີຄວາມຮູ້ສຶກຫຍັງໝົດກັບ "ຄວາມປາດຖະໜາ" ຂອງພວກເຂົາ; ຫຼາຍຄົນຢ້ານສຽງຂອງເຮົາ ແຕ່ພຣະທຳຂອງເຮົາກໍໂຈມຕີຕະຫຼອດເວລາ; ຫຼາຍຄົນຢ້ານທີ່ຈະເຫັນໜ້າຕາຂອງເຮົາ ແຕ່ເຮົາກໍຈິງໃຈປາກົດຕົວ ເພື່ອຟາດຕີພວກເຂົາລົງ. ມະນຸດບໍ່ເຄີຍເຫັນໜ້າຂອງເຮົາຢ່າງແທ້ຈິງ ແລະ ພວກເຂົາບໍ່ເຄີຍໄດ້ຍິນສຽງຂອງເຮົາຢ່າງແທ້ຈິງ; ນີ້ກໍຍ້ອນວ່າ ພວກເຂົາບໍ່ຮູ້ຈັກເຮົາຢ່າງແທ້ຈິງ. ເຖິງວ່າພວກເຂົາຈະຖືກເຮົາຟາດຕີລົງ, ເຖິງວ່າພວກເຂົາອາດຈະໜີຈາກເຮົາໄປ ແລະ ເຖິງວ່າພວກເຂົາອາດຈະຖືກຂ້ຽນຕີດ້ວຍມືຂອງເຮົາ ແຕ່ພວກເຂົາກໍຍັງບໍ່ຮູ້ວ່າ ທຸກສິ່ງທີ່ພວກເຂົາເຮັດແມ່ນເພື່ອສະແຫວງຫາໃຈຂອງເຮົາເອງຢ່າງແທ້ຈິງ ແລະ ຍັງບໍ່ຮູ້ວ່າ ເຮົາເປີດເຜີຍໃຈຂອງເຮົາເພື່ອໃຜກັນແທ້. ນັບແຕ່ການສ້າງໂລກ ບໍ່ມີໃຜເຄີຍຮູ້ຈັກເຮົາຢ່າງແທ້ຈິງ ຫຼື ເຫັນເຮົາຢ່າງແທ້ຈິງ ແລະ ເຖິງວ່າເຮົາຈະໄດ້ກາຍເປັນເນື້ອໜັງໃນປັດຈຸບັນ ແຕ່ພວກເຈົ້າກໍຍັງບໍ່ຮູ້ຈັກເຮົາ. ນີ້ບໍ່ແມ່ນຄວາມຈິງບໍ? ເຈົ້າເຄີຍເຫັນການກະທຳ ແລະ ອຸປະນິໄສຂອງເຮົາໃນເນື້ອໜັງແມ່ນແຕ່ໜ້ອຍດຽວຢູ່ບໍ?

ໃນສະຫວັນແມ່ນບ່ອນທີ່ເຮົານອນລົງ ແລະ ກ້ອງສະຫວັນແມ່ນບ່ອນທີ່ເຮົາຊອກພັກຜ່ອນ. ເຮົາມີບ່ອນທີ່ຈະອາໄສຢູ່ ແລະ ເຮົາມີເວລາເພື່ອສະແດງພະລັງອຳນາດຂອງເຮົາ. ຖ້າເຮົາບໍ່ໄດ້ຢູ່ແຜ່ນດິນໂລກ, ຖ້າເຮົາບໍ່ໄດ້ປິດບັງຕົວເຮົາເອງໄວ້ພາຍໃນເນື້ອໜັງ ແລະ ຖ້າເຮົາບໍ່ອ່ອນນ້ອມ ແລະ ລີ້ລັບ, ສະຫວັນ ແລະ ແຜ່ນດິນໂລກຈະບໍ່ຖືກປ່ຽນແປງແຕ່ດົນນານພຸ້ນບໍ? ພວກເຈົ້າທີ່ເປັນປະຊາຊົນຂອງເຮົາ ຈະບໍ່ຖືກເຮົາໃຊ້ແລ້ວບໍ? ຢ່າງໃດກໍຕາມ, ໃນການກະທຳຂອງເຮົາແມ່ນມີສະຕິປັນຍາ ແລະ ເຖິງວ່າເຮົາຈະຮັບຮູ້ເຖິງຄວາມຫຼອກລວງຂອງມະນຸດ ແຕ່ເຮົາກໍບໍ່ເຮັດຕາມຕົວຢ່າງຂອງພວກເຂົາ ແຕ່ກົງກັນຂ້າມ ເຮົາໄດ້ມອບບາງຢ່າງເພື່ອເປັນການແລກປ່ຽນໃຫ້ແກ່ພວກເຂົາ. ສະຕິປັນຍາຂອງເຮົາໃນໂລກແຫ່ງວິນຍານແມ່ນບໍ່ມີວັນສິ້ນສຸດ ແລະ ສະຕິປັນຍາຂອງເຮົາໃນເນື້ອໜັງແມ່ນມີຢູ່ຕະຫຼອດໄປ. ນີ້ບໍ່ແມ່ນຊ່ວງເວລາທີ່ການກະທຳຂອງເຮົາຖືກອະທິບາຍຢ່າງລະອຽດບໍ? ເຮົາໄດ້ຍົກໂທດ ແລະ ໃຫ້ອະໄພມະນຸດຫຼາຍຄັ້ງຈົນຮອດປັດຈຸບັນນີ້ ນັ້ນກໍຄື ຍຸກແຫ່ງອານາຈັກ. ເຮົາຈະສາມາດເລື່ອນເວລາຂອງເຮົາໄດ້ດົນກວ່ານີ້ແທ້ບໍ? ເຖິງວ່າເຮົາຈະຂ້ອນຂ້າງມີຄວາມເມດຕາຫຼາຍຂຶ້ນຕໍ່ ມະນຸດທີ່ບອບບາງ ແຕ່ເມື່ອພາລະກິດຂອງເຮົາໄດ້ສຳເລັດລົງ ເຮົາຍັງຈະສາມາດເຮັດໃຫ້ຕົວເຮົາເອງຫຍຸ້ງຍາກດ້ວຍການເຮັດພາລະກິດເກົ່ານີ້ບໍ? ເຮົາຈະເຈດຕະນາຍອມໃຫ້ຊາຕານກ່າວຫາເຮົາບໍ? ເຮົາບໍ່ຕ້ອງການໃຫ້ມະນຸດເຮັດສິ່ງໃດໜຶ່ງ ແຕ່ໃຫ້ຍອມຮັບຄວາມເປັນຈິງຂອງພຣະທຳຂອງເຮົາ ແລະ ຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານັ້ນ. ເຖິງວ່າພຣະທຳຂອງເຮົາຈະທຳມະດາ ແຕ່ໃນແກ່ນແທ້ ພຣະທຳເຫຼົ່ານັ້ນກໍຊັບຊ້ອນເນື່ອງຈາກພວກເຈົ້ານ້ອຍເກີນໄປ ແລະ ໄດ້ກາຍເປັນຄົນຕາຍດ້ານໄປແລ້ວ. ເມື່ອເຮົາເປີດເຜີຍຄວາມເລິກລັບຂອງເຮົາໂດຍກົງ ແລະ ເຮັດໃຫ້ຄວາມປະສົງຂອງເຮົາຊັດເຈນຂຶ້ນໃນເນື້ອໜັງ ພວກເຈົ້າກໍບໍ່ໄດ້ສັງເກດເຫັນສິ່ງນັ້ນ; ພວກເຈົ້າຟັງສຽງ ແຕ່ບໍ່ເຂົ້າໃຈຄວາມໝາຍຂອງພວກມັນ. ເຮົາເຕັມໄປດ້ວຍ

ຄວາມໂສກເສົ້າ. ເຖິງວ່າເຮົາຈະຢູ່ໃນເນື້ອໜັງ ແຕ່ເຮົາບໍ່ສາມາດເຮັດພາລະກິດແຫ່ງພັນທະກິດຂອງເນື້ອໜັງໄດ້.

ແມ່ນໃຜໄດ້ມາຮູ້ຈັກການກະທຳຂອງເຮົາໃນເນື້ອໜັງຈາກພຣະທຳ ແລະ ການກະທຳຂອງເຮົາບໍ່? ເມື່ອເຮົາເປີດເຜີຍຄວາມເລິກລັບຂອງເຮົາຢ່າງເປັນລາຍລັກອັກສອນ ຫຼື ກ່າວເຖິງສິ່ງເຫຼົ່ານັ້ນອອກດັງໆ, ທຸກຄົນກໍຈະຕົກຕະລຶງ; ພວກເຂົາປິດຕາຂອງພວກເຂົາຢ່າງງຽບໆ. ເປັນຫຍັງມະນຸດຈຶ່ງບໍ່ເຂົ້າໃຈໃນສິ່ງທີ່ເຮົາເວົ້າ? ເປັນຫຍັງພວກເຂົາຈຶ່ງບໍ່ສາມາດຢັ່ງເຖິງພຣະທຳຂອງເຮົາ? ເປັນຫຍັງພວກເຂົາຈຶ່ງຕາບອດຕໍ່ການກະທຳຂອງເຮົາ? ແມ່ນໃຜທີ່ສາມາດເຫັນເຮົາ ແລະ ບໍ່ເຄີຍລືມແດ່? ແມ່ນໃຜໃນທ່າມກາງພວກເຂົາທີ່ສາມາດໄດ້ຍິນສຽງຂອງເຮົາ ແລະ ບໍ່ຍອມໃຫ້ສຽງຂອງເຮົາຜ່ານພວກເຂົາໄປ? ແມ່ນໃຜທີ່ສາມາດຮູ້ສຶກເຖິງຄວາມປະສົງຂອງເຮົາ ແລະ ເຮັດໃຫ້ເຮົາພໍໃຈ? ເຮົາອາໄສຢູ່ ແລະ ເຄື່ອນໄຫວໃນທ່າມກາງຜູ້ຄົນ; ເຮົາໄດ້ມາປະສົບກັບຊີວິດຂອງພວກເຂົາ ແລະ ເຖິງວ່າເຮົາຈະຮູ້ສຶກວ່າທຸກສິ່ງດີແລ້ວຫຼັງຈາກທີ່ເຮົາໄດ້ສ້າງສິ່ງເຫຼົ່ານັ້ນເພື່ອມະນຸດ ແຕ່ເຮົາບໍ່ມີຄວາມສຸກຈາກຊີວິດໃນທ່າມກາງມະນຸດ ແລະ ບໍ່ດີໃຈກັບຄວາມສຸກໃດໆໃນທ່າມກາງພວກເຂົາ. ເຮົາບໍ່ໄດ້ກຽດຊັງ ແລະ ປະຕິເສດພວກເຂົາ ແຕ່ເຮົາກໍບໍ່ໄດ້ມີຄວາມຮູ້ສຶກອ່ອນໂຍນຕໍ່ພວກເຂົາເຊັ່ນກັນ. ເນື່ອງຈາກມະນຸດບໍ່ຮູ້ຈັກເຮົາ, ພວກເຂົາຈຶ່ງພົບກັບຄວາມຫຍຸ້ງຍາກໃນການເຫັນໜ້າເຮົາຢູ່ໃນຄວາມມືດ; ໃນທ່າມກາງສຽງຮ້ອງໂຮໂວຍວາຍ, ພວກເຂົາມີຄວາມຫຍຸ້ງຍາກໃນການໄດ້ຍິນສຽງຂອງເຮົາ ແລະ ບໍ່ສາມາດຢັ່ງຮູ້ເຖິງສິ່ງທີ່ເຮົາເວົ້າ. ສະນັ້ນ, ໂດຍຜິວເຜີນແລ້ວ ທຸກສິ່ງທີ່ພວກເຈົ້າເຮັດແມ່ນເປັນການອ່ອນນ້ອມຕໍ່ເຮົາ ແຕ່ໃນໃຈຂອງພວກເຈົ້າ ພວກເຈົ້າກໍຍັງບໍ່ເຊື່ອຟັງເຮົາ. ສາມາດເວົ້າໄດ້ວ່າ ທຳມະຊາດດັ້ງເດີມຂອງມະນຸດທັງໝົດແມ່ນເປັນແບບນີ້. ມີໃຜແດ່ທີ່ໄດ້ຮັບການຍົກເວັ້ນ? ແມ່ນໃຜແດ່ທີ່ບໍ່ແມ່ນວັດຖຸແຫ່ງການຂ້ຽນຕີຂອງເຮົາ? ຢ່າງໃດກໍຕາມ, ແມ່ນໃຜທີ່ບໍ່ດຳລົງຊີວິດພາຍໃຕ້ຄວາມອົດທົນຂອງເຮົາ? ຖ້າມວນມະນຸດຖືກທຳລາຍທັງໝົດດ້ວຍຄວາມໂກດຮ້າຍຂອງເຮົາ, ແລ້ວແມ່ນຫຍັງຄືຄວາມສຳຄັນຂອງການຊົງສ້າງສະຫວັນ ແລະ ແຜ່ນດິນໂລກຂອງເຮົາ? ຄັ້ງໜຶ່ງເຮົາໄດ້ເຕືອນຫຼາຍຄົນ, ແນະນຳຫຼາຍຄົນ ແລະພິພາກສາຫຼາຍຄົນຢ່າງເປີດເຜີຍ. ສິ່ງນີ້ບໍ່ດີກວ່າການທຳລາຍມວນມະນຸດໂດຍກົງບໍ? ເປົ້າໝາຍຂອງເຮົາບໍ່ແມ່ນເພື່ອເຮັດໃຫ້ຜູ້ຄົນຕາຍ ແຕ່ເພື່ອເຮັດໃຫ້ພວກເຂົາຮູ້ຈັກທຸກການກະທຳຂອງເຮົາໃນທ່າມກາງການພິພາກສາຂອງເຮົາ. ເມື່ອພວກເຈົ້າຂຶ້ນມາຈາກຂຸມເລິກ, ເຊິ່ງໝາຍຄວາມວ່າ ເມື່ອພວກເຈົ້າເຮັດໃຫ້ຕົວເອງລອດພົ້ນຈາກການພິພາກສາຂອງເຮົາ, ການພິຈາລະນາຕົນເອງ ແລະ ແຜນການສ່ວນຕົວຂອງພວກເຈົ້າກໍຈະຫາຍໄປໝົດ ແລະ ທຸກຄົນກໍຈະປາດຖະໜາທີ່ຈະເຮັດໃຫ້ເຮົາພໍໃຈ. ໃນນີ້, ເຮົາຈະບໍ່ບັນລຸເປົ້າໝາຍຂອງເຮົາບໍ?

ວັນທີ 1 ມີນາ 1992

# ບົດທີ 10

ໂດຍພື້ນຖານແລ້ວ, ຍຸກແຫ່ງອານາຈັກແມ່ນແຕກຕ່າງຈາກເວລາທີ່ຜ່ານມາ. ມັນບໍ່ກ່ຽວກັບການກະທຳຂອງມະນຸດ; ກົງກັນຂ້າມ, ເຮົາໄດ້ລົງມາສູ່ແຜ່ນດິນໂລກ ເພື່ອປະຕິບັດພາລະກິດຂອງເຮົາດ້ວຍຕົວເອງ ເຊິ່ງແມ່ນບາງສິ່ງທີ່ມະນຸດບໍ່ສາມາດເຂົ້າໃຈ ແລະ ບໍ່ສາມາດບັນລຸໄດ້. ເປັນເວລາຫຼາຍປີນັບແຕ່ການຊົງສ້າງໂລກ, ພາລະກິດແມ່ນກ່ຽວກັບການສ້າງຄຣິສຕະຈັກເທົ່ານັ້ນ ແຕ່ບໍ່ມີຜູ້ໃດເຄີຍໄດ້ຍິນກ່ຽວກັບການສ້າງອານາຈັກ. ເຖິງແມ່ນວ່າ ເຮົາຈະເວົ້າກ່ຽວກັບສິ່ງນີ້ດ້ວຍປາກຂອງເຮົາເອງ ແຕ່ມີໃຜແດ່ທີ່ຮູ້ຈັກແກ່ນແທ້ຂອງມັນ? ຄັ້ງໜຶ່ງເຮົາເຄີຍລົງມາສູ່ໂລກມະນຸດ ແລະ ໄດ້ມີປະສົບການ ແລະ ໄດ້ສັງເກດເບິ່ງການທົນທຸກຂອງພວກເຂົາ ແຕ່ເຮົາເຮັດເຊັ່ນນັ້ນໂດຍທີ່ບໍ່ໄດ້ເຮັດໃຫ້ຈຸດປະສົງຂອງການບັງເກີດເປັນມະນຸດຂອງເຮົາສຳເລັດ. ເມື່ອການສ້າງອານາຈັກໄດ້ເລີ່ມດຳເນີນການ, ເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາກໍໄດ້ເລີ່ມປະຕິບັດພັນທະກິດຂອງເຮົາຢ່າງເປັນທາງການ; ນັ້ນກໍຄື ກະສັດຂອງອານາຈັກໄດ້ຖືເອົາອຳນາດສູງສຸດຂອງພຣະອົງຢ່າງເປັນທາງການ. ຈາກສິ່ງນີ້ ມັນຈຶ່ງເຫັນໄດ້ຢ່າງຊັດເຈນວ່າ ການລົງມາຂອງອານາຈັກສູ່ໂລກມະນຸດ ເຊິ່ງບໍ່ແມ່ນແຕ່ເປັນພຽງການສະແດງອອກຕາມຕົວໜັງສືແຕ່ມັນຄືໜຶ່ງໃນບັນດາຄວາມເປັນຈິງທີ່ແທ້ຈິງ; ນີ້ແມ່ນສ່ວນໜຶ່ງຂອງຄວາມໝາຍຂອງ "ຄວາມເປັນຈິງຂອງການປະຕິບັດ". ມະນຸດບໍ່ເຄີຍເຫັນການກະທຳຂອງເຮົາແມ່ນແຕ່ຢ່າງດຽວ ແລະ ພວກເຂົາບໍ່ເຄີຍໄດ້ຍິນພຣະວັດຈະນະຂອງເຮົາແມ່ນແຕ່ໜຶ່ງຄຳ. ເຖິງແມ່ນວ່າ ພວກເຂົາໄດ້ເຫັນການກະທຳຂອງເຮົາ ແຕ່ພວກເຂົາໄດ້ຄົ້ນພົບຫຍັງບໍ່? ຖ້າພວກເຂົາໄດ້ຍິນເຮົາເວົ້າ ແລ້ວພວກເຂົາຈະເຂົ້າໃຈຫຍັງບໍ່? ທົ່ວໂລກ ທຸກຄົນແມ່ນມີຊີວິດຢູ່ພາຍໃນຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາ ແຕ່ມະນຸດທຸກຄົນກໍຢູ່ພາຍໃຕ້ການພິພາກສາຂອງເຮົາເຊັ່ນກັນ ແລະ ໃນທຳນອງດຽວກັນນັ້ນກໍຢູ່ພາຍໃຕ້ການທົດລອງຂອງເຮົາ. ເຮົາໄດ້ມີຄວາມເມດຕາ ແລະ ຄວາມຮັກຕໍ່ຜູ້ຄົນ ເຖິງແມ່ນພວກເຂົາທຸກຄົນໄດ້ເສື່ອມຊາມໃນລະດັບໃດໜຶ່ງກໍຕາມ; ເຮົາໄດ້ຂ້ຽນຕີພວກເຂົາ ເຖິງແມ່ນພວກເຂົາທຸກຄົນໄດ້ອ່ອນນ້ອມຢູ່ຕໍ່ໜ້າບັນລັງຂອງເຮົາກໍຕາມ. ຢ່າງໃດກໍຕາມ, ມີມະນຸດຜູ້ໃດທີ່ບໍ່ໄດ້ຢູ່ໃນທ່າມກາງການທົນທຸກ ແລະ ການເຮັດໃຫ້ບໍລິສຸດທີ່ເຮົາໄດ້ວາງອອກ? ຫຼາຍຄົນແມ່ນກຳລັງງົມຫາແສງສະຫວ່າງຜ່ານຄວາມມືດ ແລະ ຫຼາຍຄົນກຳລັງດີ້ນຣົນຢ່າງຂົມຂື່ນຜ່ານການທົດລອງຂອງພວກເຂົາ. ໂຢບມີສັດທາ ແຕ່ເພິ່ນບໍ່ໄດ້ສະແຫວງຫາທາງອອກສຳລັບຕົວເພິ່ນເອງບໍ? ເຖິງວ່າ ປະຊາຊົນຂອງເຮົາຈະສາມາດຢືນຢ່າງໝັ້ນຄົງໃນການຜະເຊີນກັບການທົດລອງ ແຕ່ມີໃຜແດ່ທີ່ຍັງມີສັດທາໃນສ່ວນເລິກຂອງເຂົາ ໂດຍບໍ່ໄດ້ກ່າວມັນອອກດັງໆ? ມັນບໍ່ແມ່ນວ່າ ຜູ້ຄົນໄດ້ເວົ້າກ່ຽວກັບຄວາມເຊື່ອຂອງພວກເຂົາ ໃນຂະນະທີ່ກຳລັງມີຂໍ້ສົງໄສໃນໃຈຂອງພວກເຂົາບໍ? ບໍ່ມີມະນຸດຜູ້ໃດທີ່ໄດ້ຕັ້ງໝັ້ນໃນການທົດລອງ ຫຼື ມີຜູ້ໃດທີ່ອ່ອນນ້ອມຢ່າງແທ້ຈິງເມື່ອຖືກທົດລອງ. ຖ້າເຮົາບໍ່ໄດ້ປົດບັງໃບໜ້າຂອງເຮົາ ເພື່ອຫຼີກເວັ້ນການເບິ່ງໂລກນີ້, ເຜົ່າພັນມະນຸດທັງໝົດກໍຈະຕົກຢູ່ພາຍໃຕ້ການຈ້ອງເບິ່ງຢ່າງເຜົາໄໝ້ຂອງເຮົາ ເພາະເຮົາບໍ່ໄດ້ຂໍຫຍັງຈາກມະນຸດ.

ເມື່ອສຽງຄໍານັບຂອງອານາຈັກດັງຂຶ້ນ ເຊິ່ງຍັງແມ່ນເວລາທີ່ສຽງຟ້າຮ້ອງທັງເຈັດດັງກັງວານຂຶ້ນ, ສຽງດັ່ງກ່າວນີ້ສັ່ນສະທ້ານສະຫວັນ ແລະ ແຜ່ນດິນໂລກ, ເຮັດໃຫ້ສະຫວັນຊັ້ນສູງສຸດສັ່ນສະເທືອນ ແລະ ເຮັດໃຫ້ຄວາມຮູ້ສຶກໃນໃຈຂອງມະນຸດທຸກຄົນສັ່ນເຊັນ. ເພງແຫ່ງອານາຈັກດັງຂຶ້ນຢ່າງເປັນພິທີ ໃນດິນແດນຂອງມັງກອນແດງທີ່ຍິ່ງໃຫຍ່ ເຊິ່ງພິສູດໃຫ້ເຫັນວ່າ ເຮົາໄດ້ທໍາລາຍປະເທດນັ້ນ ແລະ ໄດ້ສ້າງອານາຈັກຂອງເຮົາຂຶ້ນ. ສໍາຄັນໄປກວ່ານັ້ນ, ອານາຈັກຂອງເຮົາຖືກສ້າງຂຶ້ນຢູ່ເທິງແຜ່ນດິນໂລກ. ໃນຊ່ວງເວລານີ້, ເຮົາໄດ້ເລີ່ມສົ່ງທູດສະຫວັນຂອງເຮົາອອກໄປຫາທຸກຄົນຂອງບັນດາປະເທດຕ່າງໆໃນໂລກ ເພື່ອວ່າ ພວກເຂົາຈະສາມາດເບິ່ງແຍງບຸດຂອງເຮົາ ແລະ ປະຊາຊົນຂອງເຮົາ; ສິ່ງນີ້ຍັງແມ່ນເພື່ອຕອບສະໜອງຄວາມຕ້ອງການຂອງຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ. ຢ່າງໃດກໍຕາມ, ເຮົາມາບ່ອນທີ່ມັງກອນແດງທີ່ຍິ່ງໃຫຍ່ນອນມ້ວນຕົວຢູ່ ແລະ ຕໍ່ສູ້ກັບມັນດ້ວຍຕົວເຮົາເອງ. ເມື່ອມະນຸດທຸກຄົນມາຮູ້ຈັກເຮົາໃນເນື້ອໜັງ ແລະ ສາມາດເຫັນການກະທໍາຂອງເຮົາໃນເນື້ອໜັງ, ຖໍ້າຂອງມັງກອນແດງທີ່ຍິ່ງໃຫຍ່ກໍຈະກາຍເປັນຂີ້ເທົ່າ ແລະ ຫາຍໄປໂດຍບໍ່ມີຮ່ອງຮອຍ. ໃນຖານະທີ່ເປັນປະຊາຊົນຂອງອານາຈັກຂອງເຮົາ, ໃນເມື່ອພວກເຈົ້າກຽດຊັງມັງກອນແດງທີ່ຍິ່ງໃຫຍ່ຈົນເຂົ້າກະດູກດໍາ, ພວກເຈົ້າຕ້ອງເຮັດໃຫ້ເຮົາພໍໃຈ ດ້ວຍການກະທໍາຂອງພວກເຈົ້າ ແລະ ດ້ວຍວິທີນີ້ ກໍເປັນການນໍາເອົາຄວາມອັບອາຍມາສູ່ມັງກອນ. ພວກເຈົ້າຮູ້ສຶກຢ່າງແທ້ຈິງບໍວ່າມັງກອນແດງທີ່ຍິ່ງໃຫຍ່ນັ້ນເປັນຕາກຽດຊັງ? ພວກເຈົ້າຮູ້ສຶກບໍວ່າມັນແມ່ນສັດຕູຂອງອານາຈັກຂອງກະສັດ? ພວກເຈົ້າເຊື່ອແທ້ບໍວ່າພວກເຈົ້າສາມາດເປັນພະຍານຢ່າງດີຕໍ່ເຮົາ? ພວກເຈົ້າມີຄວາມໝັ້ນໃຈແທ້ບໍວ່າພວກເຈົ້າສາມາດເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ໄດ້? ນີ້ແມ່ນສິ່ງທີ່ເຮົາຂໍຈາກພວກເຈົ້າ; ສິ່ງດຽວທີ່ເຮົາຕ້ອງການແມ່ນໃຫ້ພວກເຈົ້າສາມາດໄປຮອດຂັ້ນຕອນນີ້. ພວກເຈົ້າຈະສາມາດເຮັດສິ່ງນີ້ໄດ້ບໍ? ພວກເຈົ້າເຊື່ອວ່າ ພວກເຈົ້າສາມາດບັນລຸໃນສິ່ງນີ້ໄດ້ບໍ? ແມ່ນຫຍັງແທ້ທີ່ມະນຸດສາມາດເຮັດໄດ້? ບໍ່ແມ່ນເຮົາເຮັດມັນດ້ວຍຕົວເຮົາເອງບໍ? ເປັນຫຍັງເຮົາຈຶ່ງເວົ້າວ່າ ເຮົາລົງມາດ້ວຍຕົວເຮົາເອງສູ່ສະຖານທີ່ ທີ່ໄດ້ມີການຕໍ່ສູ້ເກີດຂຶ້ນ? ສິ່ງທີ່ເຮົາຕ້ອງການແມ່ນຄວາມເຊື່ອຂອງພວກເຈົ້າ, ບໍ່ແມ່ນການກະທໍາຂອງພວກເຈົ້າ. ມະນຸດທຸກຄົນແມ່ນບໍ່ສາມາດຍອມຮັບເອົາພຣະທໍາຂອງເຮົາຢ່າງກົງໄປກົງມາ ແລະ ພຽງແຕ່ເບິ່ງພຣະທໍາເຫຼົ່ານັ້ນຢູ່ທາງຂ້າງ. ສິ່ງນີ້ໄດ້ຊ່ວຍໃຫ້ພວກເຈົ້າບັນລຸເປົ້າໝາຍຂອງພວກເຈົ້າບໍ? ພວກເຈົ້າໄດ້ມາຮູ້ຈັກເຮົາດ້ວຍວິທີນີ້ບໍ? ເວົ້າຕາມກົງ, ໃນບັນດາມະນຸດຢູ່ເທິງແຜ່ນດິນໂລກ ບໍ່ມີຜູ້ໃດສາມາດເບິ່ງເຮົາຢ່າງເຊິ່ງໜ້າໄດ້ ແລະ ບໍ່ມີຜູ້ໃດສາມາດຍອມຮັບເອົາຄວາມໝາຍອັນບໍລິສຸດ ແລະ ຂາວສະອາດຂອງພຣະທໍາຂອງເຮົາ. ດັ່ງນັ້ນ, ເຮົາຈຶ່ງໄດ້ເລີ່ມປະຕິບັດໂຄງການທີ່ບໍ່ເຄີຍມີມາກ່ອນຢູ່ເທິງແຜ່ນດິນໂລກ ເພື່ອບັນລຸເປົ້າໝາຍຂອງເຮົາ ແລະ ເພື່ອສ້າງພາບລັກທີ່ແທ້ຈິງຂອງເຮົາໃນໃຈຂອງຜູ້ຄົນ. ດ້ວຍວິທີນີ້, ເຮົາຈະສິ້ນສຸດຍຸກທີ່ຄວາມຄິດຖືອໍານາດເໜືອຜູ້ຄົນ.

ປັດຈຸບັນ ເຮົາບໍ່ພຽງແຕ່ລົງມາສູ່ປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ເທົ່ານັ້ນ ແຕ່ເຮົາຍັງຫັນໄປຜະເຊີນກັບຈັກກະວານທັງປວງ ເຊິ່ງເຮັດໃຫ້ສະຫວັນຊັ້ນສູງສຸດສັ່ນສະເທືອນ. ມີບ່ອນໃດແດ່ທີ່ບໍ່ໄດ້ຢູ່ພາຍໃຕ້ການພິພາກສາຂອງເຮົາ? ມີບ່ອນໃດແດ່ທີ່ມີຢູ່ ທີ່ບໍ່ຢູ່ພາຍໃຕ້ໄພພິບັດ ທີ່ເຮົາໄດ້ສົ່ງລົງມາບໍ?

ເຮົາໄດ້ຫວ່ານ "ເມັດພືດແຫ່ງໄພພິບັດ" ທຸກຊະນິດຢູ່ທຸກບ່ອນທີ່ເຮົາໄປ. ນີ້ແມ່ນໜຶ່ງໃນວິທີທີ່ເຮົາເຮັດພາລະກິດ ແລະ ແມ່ນການກະທຳເພື່ອຊ່ວຍມະນຸດໃຫ້ລອດພົ້ນຢ່າງບໍ່ຕ້ອງສົງໄສ ແລະ ສິ່ງທີ່ເຮົາຍື່ນໃຫ້ພວກເຂົາຍັງແມ່ນຄວາມຮັກຊະນິດໜຶ່ງອີກດ້ວຍ. ເຮົາປາດຖະໜາທີ່ຈະໃຫ້ຫຼາຍຄົນຮູ້ຈັກເຮົາ ແລະ ສາມາດເຫັນເຮົາ ແລະ ດ້ວຍວິທີນີ້ ມາເຄົາລົບບູຊາພຣະເຈົ້າ ທີ່ພວກເຂົາບໍ່ສາມາດເຫັນເປັນເວລາຫຼາຍປີ ແຕ່ຜູ້ທີ່ມີຕົວຕົນແທ້ຈິງໃນປັດຈຸບັນ. ເຮົາໄດ້ສ້າງໂລກຍ້ອນເຫດຜົນຫຍັງ? ຫຼັງຈາກທີ່ມະນຸດໄດ້ເສື່ອມຊາມ, ເປັນຫຍັງເຮົາຈຶ່ງບໍ່ທຳລາຍລ້າງພວກເຂົາຢ່າງສິ້ນເຊີງ? ຍ້ອນເຫດຜົນຫຍັງ ເຜົ່າພັນມະນຸດທັງໝົດຈຶ່ງດຳລົງຊີວິດໃນທ່າມກາງໄພພິບັດ? ຈຸດປະສົງຂອງເຮົາໃນການສວມໃສ່ເນື້ອໜັງແມ່ນຫຍັງ? ເມື່ອເຮົາປະຕິບັດພາລະກິດຂອງເຮົາ, ມະນຸດບໍ່ພຽງແຕ່ໄດ້ຮຽນຮູ້ເຖິງລົດຊາດທີ່ຂົມຂື່ນ ແຕ່ຍັງໄດ້ຮຽນຮູ້ເຖິງລົດຊາດທີ່ຫວານຊື່ນອີກດ້ວຍ. ໃນບັນດາຜູ້ຄົນທັງໝົດໃນໂລກ, ມີຜູ້ໃດທີ່ບໍ່ໄດ້ດຳລົງຊີວິດພາຍໃນພຣະຄຸນຂອງເຮົາ? ຖ້າເຮົາບໍ່ໄດ້ປະທານພອນແຫ່ງວັດຖຸໃຫ້ແກ່ມະນຸດ ແລ້ວຈະມີຜູ້ໃດໃນໂລກສາມາດມີຄວາມສຸກກັບຄວາມອຸດົມສົມບູນບໍ? ເປັນໄປໄດ້ບໍ ທີ່ການອະນຸຍາດໃຫ້ພວກເຈົ້າຮັບຕຳແໜ່ງເປັນປະຊາຊົນຂອງເຮົາຄືການໃຫ້ພອນ? ຖ້າພວກເຈົ້າບໍ່ແມ່ນປະຊາຊົນຂອງເຮົາ ແຕ່ແມ່ນຜູ້ເຮັດການບໍລິການແທນ ແລ້ວພວກເຈົ້າຈະບໍ່ໄດ້ມີຊີວິດຢູ່ພາຍໃນການໃຫ້ພອນຂອງເຮົາບໍ? ບໍ່ມີຜູ້ໃດໃນທ່າມກາງພວກເຈົ້າ ສາມາດຢັ່ງເຖິງຕົ້ນກຳເນີດຂອງພຣະທຳຂອງເຮົາ. ມະນຸດບໍ່ຮູ້ຄຸນຄ່າຕຳແໜ່ງທີ່ເຮົາໄດ້ມອບໃຫ້ພວກເຂົາ, ສະນັ້ນ ຫຼາຍຄົນໃນຕຳແໜ່ງ "ຜູ້ເຮັດການບໍລິການ" ຈຶ່ງມີຄວາມບໍ່ພໍໃຈໃນໃຈຂອງພວກເຂົາ ແລະ ຫຼາຍຄົນໃນຕຳແໜ່ງ "ປະຊາຊົນຂອງເຮົາ" ຈຶ່ງມີຄວາມຮັກຕໍ່ເຮົາໃນໃຈຂອງພວກເຂົາ. ບໍ່ມີຜູ້ໃດຄວນພະຍາຍາມຫຼອກລວງເຮົາ; ຕາຂອງເຮົາແມ່ນເຫັນທຸກຢ່າງ! ຜູ້ໃດໃນບັນດາພວກເຈົ້າ ທີ່ໄດ້ຮັບຢ່າງເຕັມໃຈ ແລະ ຜູ້ໃດໃນບັນດາພວກເຈົ້າທີ່ມອບຄວາມເຊື່ອຟັງຈົນໝົດ? ຖ້າສຽງຄຳນັບຕໍ່ອານາຈັກບໍ່ດັງຂຶ້ນ ແລ້ວພວກເຈົ້າຈະສາມາດອ່ອນນ້ອມຢ່າງແທ້ຈິງຈົນເຖິງທີ່ສຸດບໍ? ສິ່ງທີ່ມະນຸດສາມາດເຮັດ ແລະ ຄິດ ແລະ ພວກເຂົາສາມາດໄປໄກໄດ້ສໍ່າໃດ ເຊິ່ງສິ່ງທັງໝົດເຫຼົ່ານີ້ແມ່ນສິ່ງທີ່ເຮົາໄດ້ກຳນົດລ່ວງໜ້າແຕ່ດົນນານແລ້ວ.

ຜູ້ຄົນສ່ວນໃຫຍ່ຍອມຮັບເອົາການເຜົາໄໝ້ຂອງເຮົາຍ້ອນໃບໜ້າຂອງເຮົາ. ຄົນສ່ວນໃຫຍ່ທີ່ດີ້ນບັນດານດ້ວຍກຳລັງໃຈຂອງເຮົາກະຕຸ້ນຕົວເອງໄປຂ້າງໜ້າໃນການສະແຫວງຫາ. ເມື່ອກອງກຳລັງຂອງຊາຕານໂຈມຕີປະຊາຊົນຂອງເຮົາ, ເຮົາແມ່ນຢູ່ບ່ອນນັ້ນ ເພື່ອກັນພວກມັນອອກ; ເມື່ອຊາຕານວາງແຜນສ້າງຄວາມຈິບຫາຍໃນຊີວິດຂອງພວກເຂົາ ເຮົາກໍຈະເຮັດໃຫ້ມັນແລ່ນໜີດ້ວຍຄວາມພ່າຍແພ້, ໜີໄປໂດຍບໍ່ກັບຄືນມາອີກເລີຍ. ຢູ່ເທິງແຜ່ນດິນໂລກ ວິນຍານທີ່ຊົ່ວຮ້າຍທຸກປະເພດອອກຫາບ່ອນພັກຜ່ອນຢູ່ຕະຫຼອດເວລາ ແລະ ຊອກຫາຊາກສົບຂອງມະນຸດ ທີ່ມັນສາມາດກິນໄດ້ຢ່າງບໍ່ມີສິ້ນສຸດ. ປະຊາຊົນຂອງເຮົາເອີຍ! ພວກເຈົ້າຕ້ອງຄົງຢູ່ພາຍໃນການເບິ່ງແຍງ ແລະ ການປົກປ້ອງຂອງເຮົາ. ຈົ່ງຢ່າໄຮ້ສິນທຳເດັດຂາດ! ຈົ່ງຢ່າປະພຶດຕົນໂດຍບໍ່ລະວັງ! ເຈົ້າຄວນຖວາຍຄວາມຈົງຮັກພັກດີຂອງເຈົ້າໃນເຮືອນຂອງເຮົາ ແລະ ດ້ວຍຄວາມຈົງຮັກພັກດີເທົ່ານັ້ນ ເຈົ້າຈຶ່ງຈະສາມາດຕອບໂຕ້ຕໍ່ກົນອຸບາຍຂອງຜີຮ້າຍໄດ້. ພວກເຈົ້າບໍ່ຄວນປະພຶດດັ່ງທີ່ພວກເຈົ້າເຮັດໃນອະດີດ ບໍ່ວ່າ ຈະຢູ່ພາຍໃຕ້ສະຖານະການ

ໃດກໍຕາມ ໂດຍເຮັດສິ່ງໜຶ່ງຕໍ່ໜ້າເຮົາ ແລ້ວເຮັດອີກສິ່ງລັບຫຼັງເຮົາ; ຖ້າພວກເຈົ້າເຮັດເຊັ່ນນີ້, ພວກເຈົ້າກໍເກີນທີ່ຈະໄດ້ຮັບການໄຖ່ບາບແລ້ວ. ເຮົາບໍ່ໄດ້ກ່າວພຣະທຳເຫຼົ່ານີ້ຢ່າງພຽງພໍບໍ? ມັນເປັນຍ້ອນວ່າທຳມະຊາດເດີມໆຂອງມະນຸດແກ້ໄຂບໍ່ໄດ້, ເຮົາຈຶ່ງຕ້ອງໄດ້ເຕືອນຜູ້ຄົນຊໍ້າແລ້ວຊໍ້າອີກ. ຈົ່ງຢ່າເບື່ອໜ່າຍ! ທຸກສິ່ງທີ່ເຮົາເວົ້າແມ່ນເພື່ອຮັບປະກັນຊາຕາກຳຂອງພວກເຈົ້າ! ບ່ອນທີ່ເປິເປື້ອນ ແລະ ສົກກະປົກແມ່ນສິ່ງທີ່ຊາຕານຕ້ອງການຢ່າງແທ້ຈິງ; ຍິ່ງພວກເຈົ້າບໍ່ສາມາດໄຖ່ບາບຢ່າງສິ້ນຫວັງ ແລະ ຍິ່ງພວກເຈົ້າໄຮ້ສິນທຳ ໂດຍປະຕິເສດທີ່ຈະຍອມຢັບຢັ້ງໃຈ, ວິນຍານທີ່ສົກກະປົກເຫຼົ່ານັ້ນຍິ່ງຈະສວຍໂອກາດໃນການແຊກຊຶມເຂົ້າໄປໃນພວກເຈົ້າ. ຖ້າພວກເຈົ້າໄດ້ມາຮອດຈຸດນີ້, ຄວາມຈົງຮັກພັກດີຂອງພວກເຈົ້າກໍຈະບໍ່ມີຫຍັງ ນອກຈາກເປັນການເວົ້າຫຼິ້ນລ້າໆ ໂດຍບໍ່ມີຄວາມເປັນຈິງໃດໆ ແລະ ວິນຍານທີ່ສົກກະປົກກໍຈະກືນກິນຄວາມຕັ້ງໃຈຂອງພວກເຈົ້າ ແລະ ປະຕິຮູບມັນໃຫ້ເປັນຄວາມບໍ່ເຊື່ອຟັງ ແລະເປັນ ແຜນການຊົ່ວຮ້າຍ ເພື່ອໃຊ້ທຳລາຍພາລະກິດຂອງເຮົາ. ຈາກນັ້ນ, ພວກເຈົ້າກໍຈະສາມາດຖືກເຮົາຂ້ຽນຕີໃນເວລາໃດກໍໄດ້. ບໍ່ມີໃຜເຂົ້າໃຈຄວາມຮ້າຍແຮງຂອງສະຖານະການນີ້; ທຸກຄົນພຽງແຕ່ເຮັດທຳທ່າບໍ່ໄດ້ຍິນໃນສິ່ງທີ່ພວກເຂົາໄດ້ຍິນ ແລະ ບໍ່ໄດ້ລະວັງຕົວແມ່ນແຕ່ໜ້ອຍດຽວ. ເຮົາບໍ່ໄດ້ຈື່ໃນສິ່ງທີ່ຖືກເຮັດໃນອະດີດ; ເຈົ້າຍັງລໍຖ້າໃຫ້ເຮົາຜ່ອນຜັນຕໍ່ເຈົ້າໃນການ "ລືມ" ອີກຄັ້ງແທ້ບໍ? ເຖິງວ່າ ມະນຸດໄດ້ຕໍ່ຕ້ານເຮົາ ແຕ່ເຮົາກໍຈະບໍ່ຕຳນິພວກເຂົາ ເນື່ອງຈາກພວກເຂົາມີວຸດທິພາວະທີ່ຕໍ່າຫຼາຍ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງບໍ່ໄດ້ຮຽກຮ້ອງຫຼາຍເກີນໄປຈາກພວກເຂົາ. ສິ່ງດຽວທີ່ເຮົາຕ້ອງການກໍຄືບໍ່ໃຫ້ພວກເຂົາເສເພ ແລະ ໃຫ້ພວກເຂົາຍອມຕໍ່ເງື່ອນໄຂ. ແນ່ນອນ ມັນບໍ່ເກີນຄວາມສາມາດຂອງພວກເຈົ້າໃນການຕອບສະໜອງເງື່ອນໄຂຂໍ້ດຽວນີ້, ແມ່ນບໍ? ຄົນສ່ວນໃຫຍ່ແມ່ນລໍຖ້າໃຫ້ເຮົາເປີດເຜີຍຄວາມລຶກລັບຍິ່ງຂຶ້ນ ເພື່ອພວກເຂົາຈະໄດ້ລ້ຽງສາຍຕາຂອງພວກເຂົາ. ຢ່າງໃດກໍຕາມ, ເຖິງວ່າ ເຈົ້າຈະເຂົ້າໃຈຄວາມລຶກລັບທັງໝົດຂອງສະຫວັນ ແຕ່ເຈົ້າຈະສາມາດເຮັດຫຍັງໄດ້ດ້ວຍຄວາມຮູ້ນັ້ນ? ມັນຈະເພີ່ມຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາບໍ? ມັນຈະປຸກຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາບໍ? ເຮົາບໍ່ປະໝາດມະນຸດ ຫຼືຕັດສິນພວກເຂົາຢ່າງເບົາໆ. ຖ້າສິ່ງເຫຼົ່ານີ້ບໍ່ແມ່ນສະຖານະການຕົວຈິງຂອງມະນຸດ, ເຮົາກໍຈະບໍ່ມີວັນສວມເຄື່ອງໝາຍດັ່ງກ່າວໃຫ້ພວກເຂົາຢ່າງງ່າຍດາຍ. ຈົ່ງຄິດຄືນເຖິງອະດີດ: ຈັກເທື່ອແລ້ວທີ່ເຮົາໄດ້ກ່າວຮ້າຍພວກເຈົ້າ? ຈັກເທື່ອແລ້ວທີ່ເຮົາໄດ້ປະໝາດພວກເຈົ້າ? ຈັກເທື່ອແລ້ວທີ່ເຮົາໄດ້ແນມເບິ່ງພວກເຈົ້າໂດຍບໍ່ຄຳນຶງເຖິງສະຖານະການຕົວຈິງຂອງພວກເຈົ້າ? ຈັກເທື່ອແລ້ວທີ່ພຣະວັດຈະນະຂອງເຮົາບໍ່ສາມາດເອົາຊະນະພວກເຈົ້າຢ່າງໝົດໃຈ? ຈັກເທື່ອແລ້ວທີ່ເຮົາໄດ້ເວົ້າ ໂດຍບໍ່ໄດ້ດີດສາຍສິ່ງສຽງສະທ້ອນດັງກັງວານພາຍໃນພວກເຈົ້າ? ມີຜູ້ໃດໃນບັນດາພວກເຈົ້າທີ່ໄດ້ອ່ານພຣະທຳຂອງເຮົາ ໂດຍທີ່ບໍ່ຢ້ານກົວ ແລະ ມີອາການສັ່ນເຊັນ ໂດຍຢ້ານຢູ່ເລິກໆວ່າ ເຮົາຈະໂຈມຕີພວກເຈົ້າໃຫ້ຕົກລົງສູ່ຂຸມເລິກທີ່ສຸດ? ເປັນຫຍັງຈຶ່ງບໍ່ອົດທົນກັບການທົດລອງຈາກພຣະທຳຂອງເຮົາ? ພາຍໃນຖ້ອຍຄຳຂອງເຮົາມີສິດອຳນາດ ແຕ່ນີ້ບໍ່ແມ່ນເພື່ອການພິພາກສາມະນຸດແບບງ່າຍໆ; ກົງກັນຂ້າມ, ເຮົາໄດ້ສະແດງຄວາມໝາຍທີ່ມີຢູ່ໃນພຣະທຳຂອງເຮົາຕໍ່ພວກເຂົາຢູ່ສະເໝີ ໂດຍໃສ່ໃຈກັບສະຖານະການຕົວຈິງຂອງພວກເຂົາ. ແທ້ຈິງແລ້ວ ມີຜູ້ໃດ ທີ່ສາມາດຮູ້ເຖິງອຳນາດອັນຍິ່ງໃຫຍ່ຂອງເຮົາທີ່ຢູ່ໃນພຣະທຳຂອງເຮົາບໍ່?

ມີຜູ້ໃດ ທີ່ສາມາດຮັບກ້ອນຄຳທີ່ບໍລິສຸດທີ່ສຸດທີ່ໄດ້ສ້າງພຣະທຳຂອງເຮົາບໍ? ເຮົາໄດ້ກ່າວພຣະທຳຫຼາຍສໍ່າໃດແລ້ວ? ມີຜູ້ໃດເຄີຍເຫັນຄຸນຄ່າພຣະທຳເຫຼົ່ານັ້ນບໍ່?

ວັນທີ 3 ມີນາ 1992

# ເພງແຫ່ງອານາຈັກ

ຝູງຊົນຍົກຍ້ອງເຮົາ ຝູງຊົນສັນລະເສີນເຮົາ; ປາກທຸກຄົນຂະໜານນາມເຮົາວ່າເປັນພຣະເຈົ້າອົງແທ້ຈິງ, ທຸກຄົນມີນຕາຂອງພວກເຂົາເພື່ອເບິ່ງການກະທຳຂອງເຮົາ. ອານາຈັກລົງມາເທິງໂລກມະນຸດ, ບຸກຄົນຂອງເຮົາມັ່ງຄັ່ງ ແລະ ອຸດົມສົມບູນ. ຜູ້ໃດຈະບໍ່ສະຫຼອງໃນສິ່ງນີ້? ຜູ້ໃດຈະບໍ່ຟ້ອນລຳດ້ວຍຄວາມສຸກໃຈ? ໂອ້ ຊີໂອນ! ຈົ່ງຍົກທຸງແຫ່ງໄຊຊະນະຂອງເຈົ້າເພື່ອສະຫຼອງໃຫ້ກັບເຮົາ! ຈົ່ງຮ້ອງເພງແຫ່ງໄຊຊະນະຂອງເຈົ້າເພື່ອປະກາດນາມອັນບໍລິສຸດຂອງເຮົາ! ທຸກສິ່ງເທິງແຜ່ນດິນໂລກຈົນເຖິງສຸດປາຍແຜ່ນດິນ! ໃຫ້ຟ້າວຊຳລະລ້າງຕົວພວກເຈົ້າເອງ ເພື່ອວ່າພວກເຈົ້າຈະຖືກເຮັດໃຫ້ເປັນເຄື່ອງຖວາຍໃຫ້ແກ່ເຮົາ! ດວງດາວໃນທ້ອງຟ້າ! ຈົ່ງກັບຄືນມາສູ່ບ່ອນຂອງພວກເຈົ້າໂດຍໄວເພື່ອສະແດງລິດທານຸພາບອັນຍິ່ງໃຫຍ່ຂອງເຮົາໃນທ້ອງຟ້າ! ເຮົາງ່ຽງຫູຂອງເຮົາຕໍ່ສຽງຂອງຜູ້ຄົນເທິງແຜ່ນດິນໂລກ, ຜູ້ທີ່ຖອກເທຄວາມຮັກຢ່າງບໍ່ມີລັນດອນ ແລະ ເຄົາລົບຕໍ່ເຮົາໃນບົດເພງ! ໃນມື້ນີ້ ເມື່ອສິ່ງຊົງສ້າງທັງປວງກັບຄືນສູ່ຊີວິດ, ເຮົາລົງມາສູ່ໂລກແຫ່ງມະນຸດ. ໃນຊ່ວງເວລານີ້, ໃນຈຸດເຊື່ອມຕໍ່ນີ້, ດອກໄມ້ເບັ່ງບານທັງໝົດ, ຝູງສະກຸນາຮ້ອງເພງດ້ວຍສຽງດຽວກັນ, ທຸກສິ່ງເຕັ້ນດ້ວຍຄວາມເບີກບານ! ທ່າມກາງສຽງໂຮ່ຮ້ອງແຫ່ງການຕ້ອນຮັບອານາຈັກ, ອານາຈັກຂອງຊາຕານລົ້ມລະລາຍ, ຖືກທຳລາຍດ້ວຍສຽງຮ້ອງນັ້ນຂອງເພງແຫ່ງອານາຈັກ, ບໍ່ຟື້ນຄືນມາອີກ!

ມີໃຜຢູ່ເທິງແຜ່ນດິນໂລກກ້າລຸກຂຶ້ນ ແລະ ຕໍ່ຕ້ານ? ເມື່ອເຮົາລົງມາສູ່ແຜ່ນດິນໂລກ ເຮົານຳການເຜົາໄໝ້, ນຳຄວາມໂກດຮ້າຍ, ນຳໄພພິບັດທຸກຮູບແບບ. ບັດນີ້ ອານາຈັກຕ່າງໆເທິງແຜ່ນດິນໂລກແມ່ນອານາຈັກຂອງເຮົາ! ເທິງທ້ອງຟ້າ ກ້ອນເມກພັງທະລາຍລົງ ແລະ ເປັນຄື້ນທະເລມອກ; ໃຕ້ທ້ອງຟ້າ, ທະເລສາບ ແລະ ແມ່ນ້ຳໄຫຼນອງ ເປັນຟອງທີ່ຟົດເຟືອນເໝືອນດັ່ງທຳນອງເພງ. ຝູງສັດສາວາສິ່ງທີ່ຫຼັບນອນພັກຢູ່ ກໍອອກມາຈາກຖ້ຳຂອງພວກມັນ ແລະ ທຸກຄົນທີ່ນອນຫຼັບຢູ່ກໍຕື່ນຂຶ້ນມາຈາກການນອນຫຼັບຍ້ອນເຮົາ. ວັນທີ່ຝູງຊົນໄດ້ລໍຖ້າ ໃນທີ່ສຸດ ກໍມາຮອດແລ້ວ! ພວກເຂົາຖວາຍບົດເພງທີ່ສວຍງາມທີ່ສຸດໃຫ້ກັບເຮົາ!

ໃນຊ່ວງເວລາທີ່ງົດງາມນີ້ ໃນເວລາທີ່ຕື່ນເຕັ້ນນີ້,

ຄຳສັນລະເສີນສິ່ງສຽງຢູ່ທຸກບ່ອນ, ໃນສະຫວັນທີ່ຢູ່ເບື້ອງເທິງ ແລະ ແຜ່ນດິນໂລກທີ່ຢູ່ເບື້ອງລຸ່ມ. ຜູ້ໃດຈະບໍ່ຕື່ນເຕັ້ນກັບສິ່ງນີ້?

ຫົວໃຈຂອງຜູ້ໃດຈະບໍ່ຍິນດີກັບສິ່ງນີ້? ຜູ້ໃດຈະບໍ່ຮ້ອງໄຫ້ກັບເຫດການນີ້?

ທ້ອງຟ້າບໍ່ແມ່ນທ້ອງຟ້າຄືເກົ່າບັດນີ້ມັນແມ່ນທ້ອງຟ້າແຫ່ງອານາຈັກ.

ແຜ່ນດິນໂລກບໍ່ແມ່ນແຜ່ນດິນໂລກທີ່ເຄີຍເປັນ ແຕ່ບັດນີ້ ເປັນດິນແດນໂລກທີ່ບໍລິສຸດ.

ຫຼັງຈາກຝົນຕົກແຮງໄດ້ຜ່ານໄປ ໂລກເກົ່າທີ່ສົກກະປົກກໍຜັນແປປ່ຽນທັງໝົດ.

ພູເຂົາປ່ຽນ... ນ້ຳປ່ຽນ...

ຜູ້ຄົນກໍປ່ຽນ... ທຸກສິ່ງປ່ຽນ...

ໂອ, ພູເຂົາທີ່ມິດງຽບ! ຈົ່ງລຸກຂຶ້ນ ແລະ ຟ້ອນລຳເພື່ອເຮົາ!

ໂອ, ນ້ຳຂັງ! ຈົ່ງຫຼັ່ງໄຫຼນອງທຸກແຫ່ງຫົນຢ່າງເປັນອິດສະຫຼະ!

ພວກເຈົ້າ ມະນຸດທີ່ກຳລັງຫຼັບໄຫຼ! ຈົ່ງປຸກຕົນເອງ ແລະ ສະແຫວງຫາ!

ເຮົາມາແລ້ວ... ແລະ ເຮົາຄືກະສັດ...

ມະນຸດຊາດທຸກຄົນຈະເຫັນໃບໜ້າຂອງເຮົາດ້ວຍຕາຂອງພວກເຂົາ, ຈະໄດ້ຍິນສຽງຂອງເຮົາດ້ວຍຫູຂອງພວກເຂົາ,

ຈະດຳລົງຊີວິດເພື່ອພວກເຂົາເອງຕະຫຼອດຊີວິດໃນອານາຈັກ...

ຊ່າງຫວານຊື່ນ... ຊ່າງງົດງາມ...

ບໍ່ສາມາດລືມໄດ້... ເປັນໄປບໍ່ໄດ້ທີ່ຈະລືມ...

ທ່າມກາງຄວາມໂກດຮ້າຍທີ່ເຜົາໄໝ້ຂອງເຮົາ ມັງກອນແດງຜູ້ທີ່ຍິ່ງໃຫຍ່ດີ້ນຮົນ;

ທ່າມກາງການພິພາກສາຢ່າງສະຫງ່າລາສີຂອງເຮົາ ມານຮ້າຍສະແດງທາດແທ້ຂອງພວກມັນ;

ທ່າມກາງພຣະທຳທີ່ຍິ່ງໃຫຍ່ຂອງເຮົາ ທຸກຄົນຮູ້ສຶກລະອາຍໃຈຢ່າງເລິກເຊິ່ງ ແລະ ບໍ່ມີບ່ອນທີ່ຈະເຊື່ອງຕົວເອງໄວ້.

ພວກເຂົາຫວນຄືນອະດີດ, ພວກເຂົາໄດ້ເຍາະເຍີ້ຍ ແລະ ທ້ວຂວັນເຮົາແນວໃດ.

ບໍ່ເຄີຍມີເວລາທີ່ພວກເຂົາບໍ່ໂອ້ອວດຕົວເອງ, ບໍ່ເຄີຍມີເວລາທີ່ພວກເຂົາບໍ່ທ້າທາຍເຮົາ.

ມື້ນີ້ ໃຜຈະບໍ່ຮ້ອງໄຫ້? ໃຜບໍ່ຮູ້ສຶກເສຍໃຈ?

ທົ່ວທັງຈັກກະວານ ໂລກເຕັມໄປດ້ວຍການຮ້ອງໄຫ້...

ເຕັມໄປດ້ວຍສຽງໂຮ່ຮ້ອງຍິນດີ... ເຕັມໄປດ້ວຍສຽງຫົວ...

ຄວາມສຸກໃຈທີ່ຫາສິ່ງໃດປຽບປານໄດ້... ຄວາມສຸກໃຈທີ່ຫາສິ່ງໃດທຽບທຽມໄດ້...

ຝົນຕົກຜະສຽງດັງຄ່ອຍໆ... ຫິມະຕົກ ພັດປິວລົງມາຢ່າງແຮງ...

ພາຍໃນຜູ້ຄົນ, ຄວາມເສົ້າໃຈ ແລະ ສຸກໃຈປະສົມປະສານກັນ... ບາງຄົນຫົວ...

ບາງຄົນຮ້ອງໄຫ້... ແລະ ບາງຄົນຮ້ອງໂຮ່ດີໃຈ...

ເໝືອນກັບທຸກຄົນໄດ້ລືມໄປວ່າ... ມັນຄືລະດູໃບໄມ້ປົ່ງທີ່ອຸດົມສົມບູນ ເຊິ່ງມີຝົນຕົກ ແລະ ກ້ອນເມກ,

ລະດູຮ້ອນເຕັມໄປດ້ວຍດອກໄມ້ບານ ລະດູໃບໄມ້ຫຼົ່ນອຸດົມສົມບູນດ້ວຍການເກັບກ່ຽວອັນອຸດົມສົມບູນ,

ຫຼື ລະດູໜາວທີ່ໜາວເຢັນເໝືອນນໍ້າກ້ອນ ແລະ ນໍ້າກ້າມ, ບໍ່ມີໃຜຮູ້...

ໃນທ້ອງຟ້າ ກ້ອນເມກເລື່ອນລອຍ ເທິງແຜ່ນດິນໂລກ ມະຫາສະໝຸດຟົດ.

ລູກຊາຍທັງຫຼາຍພາກັນໂບກມື... ຜູ້ຄົນຍັບຍ້າຍຂາພາກັນຟ້ອນລຳ...

ຝູງເທວະດາກໍປະຕິບັດວຽກງານ... ຝູງເທວະດາກຳລັງລ້ຽງດູ...

ຜູ້ຄົນແຫ່ງແຜ່ນດິນໂລກມີຊີວິດຊີວາ ແລະ ທຸກສິ່ງເທິງແຜ່ນດິນໂລກເພີ່ມພູນຄູນທະວີ.

# ບົດທີ 11

ທຸກຄົນໃນມະນຸດຊາດຄວນຍອມຮັບການກວດສອບຢ່າງຖີ່ຖ້ວນໂດຍພຣະວິນຍານຂອງເຮົາ, ຄວນກວດກາທຸກຄຳເວົ້າ ແລະ ການກະທຳຂອງພວກເຂົາຢ່າງໃກ້ຊິດ ແລະ ຍິ່ງໄປກວ່ານັ້ນ ກໍຄວນເບິ່ງການກະທຳທີ່ມະຫັດສະຈັນຂອງເຮົາ. ພວກເຈົ້າຮູ້ສຶກແນວໃດ ໃນເວລາທີ່ອານາຈັກມາຮອດແຜ່ນດິນໂລກ? ເມື່ອພຣະບຸດ ແລະ ປະຊາຊົນຂອງເຮົາຫຼັ່ງໄຫຼໄປຍັງບັນລັງຂອງເຮົາ, ເຮົາຈະເລີ່ມການພິພາກສາຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່ຢ່າງເປັນທາງການ. ໝາຍຄວາມວ່າ ເມື່ອເຮົາເລີ່ມພາລະກິດຂອງເຮົາເທິງແຜ່ນດິນໂລກດ້ວຍຕົວເອງ ແລະ ເມື່ອຍຸກແຫ່ງການພິພາກສາໃກ້ຈະສິ້ນສຸດລົງ, ເຮົາຈະສອນພຣະທຳຂອງເຮົາໃຫ້ແກ່ຈັກກະວານທັງໝົດ ແລະ ເປັ່ງສຽງຂອງພຣະວິນຍານຂອງເຮົາໄປທົ່ວຈັກກະວານ. ຜ່ານພຣະທຳຂອງເຮົາ, ເຮົາຈະຊໍາລະລ້າງທຸກຄົນ ແລະ ທຸກສິ່ງທັງມວນທີ່ຢູ່ໃນສະຫວັນ ແລະ ແຜ່ນດິນໂລກ ເພື່ອວ່າ ດິນແດນຈະບໍ່ສົກກະປົກ ແລະ ຂາດສິນທຳອີກຕໍ່ໄປ ແຕ່ເປັນອານາຈັກບໍລິສຸດ. ເຮົາຈະສ້າງທຸກສິ່ງຄືນໃໝ່ ເພື່ອວ່າ ສິ່ງເຫຼົ່ານັ້ນຈະຖືກກຽມໄວ້ໃຫ້ສຳລັບການນຳໃຊ້ຂອງເຮົາ, ເພື່ອວ່າ ສິ່ງເຫຼົ່ານັ້ນຈະບໍ່ມີລົມຫາຍໃຈຂອງແຜ່ນດິນໂລກອີກຕໍ່ໄປ ແລະ ບໍ່ມີຮອຍມົນທິນຈາກລົດຊາດຂອງພື້ນດິນອີກຕໍ່ໄປ. ຢູ່ແຜ່ນດິນໂລກ, ມະນຸດພະຍາຍາມຊອກຫາເປົ້າໝາຍ ແລະ ຕົ້ນກຳເນີດຂອງພຣະທຳຂອງເຮົາ ແລະ ໄດ້ສັງເກດເບິ່ງພຣະທຳຂອງເຮົາ ແຕ່ບໍ່ມີໃຜຮູ້ຈັກຕົ້ນກຳເນີດຂອງພຣະທຳຂອງເຮົາຢ່າງແທ້ຈິງ ແລະ ບໍ່ມີໃຜເຄີຍເຫັນຄວາມມະຫັດສະຈັນຂອງການກະທຳຂອງເຮົາຢ່າງແທ້ຈິງ. ພຽງໃນປັດຈຸບັນນີ້ເທົ່ານັ້ນ ເມື່ອເຮົາໄດ້ມາຢູ່ໃນທ່າມກາງມະນຸດດ້ວຍຕົວເອງ ແລະ ກ່າວພຣະທຳຂອງເຮົາ, ມະນຸດຈຶ່ງມີຄວາມຮູ້ໜ້ອຍໜຶ່ງກ່ຽວກັບເຮົາ, ກຳຈັດບ່ອນທີ່ “ເຮົາ” ຈັບຈອງໃນຄວາມຄິດຂອງພວກເຂົາ ແລະ ໃນທາງກົງກັນຂ້າມ ໄດ້ສ້າງບ່ອນສຳລັບພຣະເຈົ້າທີ່ແທ້ຈິງໃນຈິດສຳນຶກຂອງພວກເຂົາ. ມະນຸດມີແນວຄິດ ແລະ ເຕັມໄປດ້ວຍຄວາມສົງໄສ; ແມ່ນໃຜທີ່ບໍ່ຕ້ອງການເຫັນພຣະເຈົ້າ? ແມ່ນໃຜທີ່ບໍ່ປາດຖະໜາທີ່ຈະພົບປະກັບພຣະເຈົ້າ? ແຕ່ສິ່ງດຽວທີ່ຄອບຄອງຫ້ອງຫົວໃຈຂອງມະນຸດຢ່າງໝັ້ນຄົງກໍຄືພຣະເຈົ້າທີ່ມະນຸດຮູ້ສຶກວ່າເລື່ອນລອຍ ແລະ ເປັນນາມມະທຳ. ແມ່ນໃຜຈະຮູ້ເຖິງສິ່ງນີ້ ຖ້າເຮົາບໍ່ໄດ້ບອກພວກເຂົາຢ່າງຊັດເຈນ? ແມ່ນໃຜຈະເຊື່ອຢ່າງແທ້ຈິງພ້ອມກັບຄວາມແນ່ນອນ ແລະ ບໍ່ມີແມ່ນແຕ່ຂໍ້ສົງໄສວ່າ ເຮົາມີຕົວຕົນແທ້ໆ? ມີຄວາມແຕກຕ່າງຢ່າງຫຼວງຫຼາຍລະຫວ່າງ “ເຮົາ” ທີ່ຢູ່ໃນໃຈຂອງມະນຸດ ແລະ “ເຮົາ” ແຫ່ງຄວາມເປັນຈິງ ແລະ ບໍ່ມີໃຜສາມາດປຽບທຽບສິ່ງເຫຼົ່ານັ້ນໄດ້. ຖ້າເຮົາບໍ່ໄດ້ກາຍເປັນເນື້ອໜັງ, ມະນຸດຈະບໍ່ມີມື້ຮູ້ຈັກເຮົາ ແລະ ເຖິງວ່າ ເຂົາຈະຮູ້ຈັກເຮົາ ແຕ່ຄວາມຮູ້ດັ່ງກ່າວນັ້ນຍັງບໍ່ແມ່ນເປັນພຽງແນວຄິດບໍ? ແຕ່ລະມື້ ເຮົາຍ່າງໃນທ່າມກາງການເຄື່ອນໄຫວຂອງຜູ້ຄົນຢ່າງບໍ່ຢຸດຢັ້ງ ແລະ ແຕ່ລະມື້ ເຮົາປະຕິບັດງານພາຍໃນທຸກຄົນ. ເມື່ອມະນຸດເຫັນເຮົາຢ່າງແທ້ຈິງ, ເຂົາຈະສາມາດຮູ້ຈັກເຮົາໃນພຣະທຳຂອງເຮົາ ແລະ ເຂົ້າໃຈວິທີທີ່ເຮົາກ່າວ ພ້ອມດ້ວຍເຈດຕະນາຂອງເຮົາ.

ເມື່ອອານາຈັກມາຮອດແຜ່ນດິນໂລກຢ່າງເປັນທາງການ, ມີສິ່ງໃດໃນທ່າມກາງທຸກສິ່ງ ທີ່ຈະບໍ່ມິດງຽບລົງ? ແມ່ນໃຜໃນທ່າມກາງມະນຸດທີ່ຈະບໍ່ຢ້ານ? ເຮົາຍ່າງໄປທຸກບ່ອນທົ່ວຈັກກະວານ ແລະ

ທຸກຢ່າງແມ່ນຖືກເຮົາຈັດແຈງດ້ວຍຕົວເອງ. ໃນເວລານີ້ ແມ່ນໃຜທີ່ບໍ່ຮູ້ວ່າ ການກະທຳຂອງເຮົາມະຫັດສະຈັນ? ມືຂອງເຮົາຍົກທຸກຢ່າງຂຶ້ນຢ່າງສູງ ແຕ່ເຮົາກໍຍັງຢູ່ເທິງທຸກສິ່ງເຫຼົ່ານັ້ນ. ໃນປັດຈຸບັນ, ບໍ່ແມ່ນການບັງເກີດເປັນມະນຸດ ແລະ ການປາກົດຢູ່ດ້ວຍຕົວເຮົາເອງໃນທ່າມກາງມະນຸດບໍ ທີ່ຄືຄວາມໝາຍແທ້ຈິງຂອງຄວາມອ່ອນນ້ອມ ແລະ ຄວາມລຶກລັບຂອງເຮົາ? ດ້ານພາຍນອກ, ຫຼາຍຄົນຍົກຍ້ອງເຮົາວ່າດີ ແລະ ສັນລະເສີນເຮົາວ່າງົດງາມ ແຕ່ມີໃຜທີ່ຮູ້ຈັກເຮົາຢ່າງແທ້ຈິງແດ່? ໃນປັດຈຸບັນ, ເປັນຫຍັງເຮົາຈຶ່ງຖາມວ່າ ພວກເຈົ້າຮູ້ຈັກເຮົາບໍ? ເປົ້າໝາຍຂອງເຮົາບໍ່ແມ່ນເພື່ອເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ອັບອາຍບໍ? ເຮົາບໍ່ປາດຖະໜາ ທີ່ຈະບັງຄັບມະນຸດໃຫ້ສັນລະເສີນເຮົາ ແຕ່ເພື່ອເຮັດໃຫ້ເຂົາຮູ້ຈັກເຮົາ ເຂົາຈຶ່ງຈະຮັກເຮົາຜ່ານວິທີນັ້ນ ແລະ ດ້ວຍເຫດນັ້ນ ກໍຈະສັນລະເສີນເຮົາ. ການສັນລະເສີນດັ່ງກ່າວແມ່ນຄູ່ຄວນຕໍ່ຊື່ຂອງມັນ ແລະ ບໍ່ແມ່ນການເວົ້າທີ່ວ່າງເປົ່າ; ມີແຕ່ການສັນລະເສີນດັ່ງກ່າວນີ້ເທົ່ານັ້ນ ທີ່ສາມາດໄປເຖິງບັນລັງຂອງເຮົາ ແລະ ຂຶ້ນໄປເທິງຟ້າ. ຍ້ອນມະນຸດຖືກຊາຕານລໍ້ລວງ ແລະ ເຮັດໃຫ້ເສື່ອມຊາມ, ຍ້ອນເຂົາຖືກຄອບງຳໂດຍແນວຄິດ ແລະ ຄວາມຄິດ, ເຮົາຈຶ່ງໄດ້ກາຍເປັນເນື້ອໜັງ ເພື່ອເອົາຊະນະມວນມະນຸດທຸກຄົນດ້ວຍຕົວເອງ, ເພື່ອເປີດເຜີຍແນວຄິດທັງໝົດຂອງມະນຸດ ແລະ ເພື່ອຈີກຄວາມຄິດຂອງມະນຸດອອກເປັນສິ້ນສ່ວນ. ດ້ວຍເຫດນັ້ນ, ມະນຸດຈຶ່ງບໍ່ແຫ່ຂະບວນຢູ່ຕໍ່ໜ້າເຮົາອີກຕໍ່ໄປ ແລະ ບໍ່ຮັບໃຊ້ເຮົາໂດຍການນຳໃຊ້ແນວຄິດຂອງເຂົາເອງອີກຕໍ່ໄປ ແລະ ສະນັ້ນ "ເຮົາ" ທີ່ຢູ່ໃນແນວຄິດຂອງມະນຸດຈຶ່ງຖືກກຳຈັດ. ເມື່ອອານາຈັກມາເຖິງ, ສິ່ງທຳອິດທີ່ເຮົາຈະເຮັດແມ່ນການເລີ່ມຂັ້ນຕອນນີ້ຂອງພາລະກິດ ແລະ ເຮົາຈະກະທຳພາລະກິດດັ່ງກ່າວນັ້ນພາຍໃນປະຊາຊົນຂອງເຮົາ. ໃນຖານະເປັນປະຊາຊົນຂອງເຮົາ ທີ່ເກີດໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່, ແນ່ນອນຢູ່ແລ້ວວ່າພວກເຈົ້າແມ່ນຈະມີພິດຂອງມັງກອນແດງທີ່ຍິ່ງໃຫຍ່ບໍ່ໜ້ອຍກໍຫຼາຍ. ສະນັ້ນ, ຂັ້ນຕອນນີ້ຂອງພາລະກິດຂອງເຮົາແມ່ນສຸມໃສ່ພວກເຈົ້າເປັນຫຼັກ ແລະ ນີ້ແມ່ນດ້ານໜຶ່ງຂອງຄວາມໝາຍຂອງການບັງເກີດເປັນມະນຸດຂອງເຮົາໃນປະເທດຈີນ. ຜູ້ຄົນສ່ວນຫຼາຍແມ່ນບໍ່ສາມາດ ເຂົ້າໃຈແມ່ນແຕ່ເສດໜຶ່ງຂອງພຣະທຳທີ່ເຮົາກ່າວ ແລະ ເມື່ອພວກເຂົາເຂົ້າໃຈ ຄວາມເຂົ້າໃຈຂອງພວກເຂົາກໍບໍ່ຊັດເຈນ ແລະ ສັບສົນ. ນີ້ແມ່ນຈຸດຫັນປ່ຽນໃນວິທີການທີ່ເຮົາກ່າວ. ຖ້າທຸກຄົນສາມາດອ່ານພຣະທຳຂອງເຮົາ ແລະ ເຂົ້າໃຈຄວາມໝາຍຂອງພຣະທຳເຫຼົ່ານັ້ນ ແລ້ວແມ່ນໃຜໃນທ່າມກາງມະນຸດທີ່ຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ ແລະ ບໍ່ຖືກໂຍນລົງສູ່ແດນມໍລະນາ? ເມື່ອມະນຸດຮູ້ຈັກເຮົາ ແລະ ເຊື່ອຟັງເຮົາ, ນັ້ນຈະເປັນເວລາທີ່ເຮົາພັກຜ່ອນ ແລະ ນັ້ນຈະເປັນເວລາທີ່ມະນຸດສາມາດເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາຢ່າງແທ້ຈິງ. ໃນປັດຈຸບັນ, ວຸດທິພາວະຂອງພວກເຈົ້າແມ່ນຕໍ່າເກີນໄປ, ມັນຕໍ່າຢ່າງໜ້າສົມເພດ, ບໍ່ຄູ່ຄວນທີ່ຈະຖືກຍົກຂຶ້ນ, ສ່ວນຄວາມຮູ້ຂອງພວກເຈົ້າກ່ຽວກັບເຮົານັ້ນ ແມ່ນບໍ່ຕ້ອງເວົ້າເຖິງ.

ເຖິງວ່າ ເຮົາເວົ້າວ່າທູດສະຫວັນໄດ້ເລີ່ມຖືກສົ່ງໄປລ້ຽງດູພຣະບຸດ ແລະ ປະຊາຊົນຂອງເຮົາ ແຕ່ກໍບໍ່ມີໃຜທີ່ສາມາດເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາ. ເມື່ອເຮົາມາຢູ່ໃນທ່າມກາງ ມະນຸດດ້ວຍຕົວເອງ, ທູດສະຫວັນກໍເລີ່ມພາລະກິດຂອງການລ້ຽງດູໄປພ້ອມໆກັນ ແລະ ໃນຊ່ວງເວລາການລ້ຽງດູຂອງທູດສະຫວັນ, ພຣະບຸດ ແລະ ປະຊາຊົນທຸກຄົນບໍ່ພຽງແຕ່ໄດ້ຮັບການທົດສອບ ແລະ ການລ້ຽງດູ

ເທົ່ານັ້ນ ແຕ່ຍັງສາມາດເຫັນປະກົດການຂອງນິມິດທຸກປະເພດດ້ວຍຕາຂອງພວກເຂົາເອງ. ຍ້ອນເຮົາເຮັດພາລະກິດໃນຄວາມເປັນພຣະເຈົ້າໂດຍກົງ ທຸກສິ່ງຈຶ່ງເຂົ້າສູ່ການເລີ່ມຕົ້ນໃໝ່ ແລະ ຍ້ອນພາລະກິດຂອງຄວາມເປັນພຣະເຈົ້າໂດຍກົງນີ້ ມັນຈຶ່ງບໍ່ຖືກຈຳກັດໂດຍຄວາມເປັນມະນຸດແມ່ນແຕ່ໜ້ອຍ ແລະສຳລັບມະນຸດແລ້ວ ເບິ່ງຄືວ່າມີການດຳເນີນການຢ່າງເປັນອິດສະຫຼະພາຍໃຕ້ສະຖານະການທີ່ເໜືອທຳມະຊາດ. ແຕ່ສຳລັບເຮົາແລ້ວ, ມັນແມ່ນເລື່ອງປົກກະຕິຢ່າງສິ້ນເຊີງ (ມະນຸດເຊື່ອວ່າ ມັນເໜືອທຳມະຊາດ ຍ້ອນເຂົາບໍ່ເຄີຍພົບກັບຄວາມເປັນພຣະເຈົ້າໂດຍກົງ); ສິ່ງນັ້ນບໍ່ມີແນວຄິດຂອງມະນຸດ ແລະ ບໍ່ມີແນວຄວາມຄິດຂອງມະນຸດປະປົນຢູ່ນຳ. ຜູ້ຄົນຈະເຫັນສິ່ງນີ້ເທົ່ານັ້ນເມື່ອພວກເຂົາທຸກຄົນໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ; ຍ້ອນຕອນນີ້ແມ່ນຕອນເລີ່ມຕົ້ນ, ເມື່ອມາເຖິງທາງເຂົ້າຂອງເຂົາ ມະນຸດກໍຈະມີຂໍ້ບົກຜ່ອງຫຼາຍ ແລະ ຄວາມລົ້ມເຫຼວ ແລະ ຄວາມມືດມົວກໍຍາກທີ່ຈະຫຼີກເວັ້ນໄດ້. ໃນປັດຈຸບັນ, ເມື່ອເຮົາໄດ້ນຳພາພວກເຈົ້າມາເຖິງຈຸດນີ້ແລ້ວ, ເຮົາກໍຈະໄດ້ດຳເນີນການຈັດແຈງຢ່າງເໝາະສົມ ແລະມີເປົ້າໝາຍຂອງເຮົາເອງ. ຖ້າເຮົາບອກພວກເຈົ້າກ່ຽວກັບສິ່ງເຫຼົ່ານັ້ນໃນປັດຈຸບັນ ແລ້ວພວກເຈົ້າຈະສາມາດຮູ້ຈັກສິ່ງເຫຼົ່ານັ້ນໄດ້ຢ່າງແທ້ຈິງບໍ? ເຮົາຄຸ້ນເຄີຍດີກັບຄວາມຄິດໃນຈິດໃຈຂອງມະນຸດ ແລະຄວາມປາດຖະໜາຈາກຫົວໃຈຂອງມະນຸດ: ແມ່ນໃຜທີ່ບໍ່ເຄີຍຊອກຫາທາງອອກໃຫ້ແກ່ຕົວເອງແດ່? ແມ່ນໃຜທີ່ບໍ່ເຄີຍຄິດເຖິງໂອກາດຂອງຕົວເອງແດ່? ແຕ່ເຖິງແມ່ນວ່າ ມະນຸດຈະມີສະຕິປັນຍາທີ່ອຸດົມສົມບູນ ແລະ ໜ້າປະທັບໃຈ ແຕ່ແມ່ນໃຜທີ່ສາມາດຄາດເດົາວ່າ ຫຼັງຈາກຍຸກຕ່າງໆແລ້ວ ຍຸກປັດຈຸບັນຈະກາຍເປັນຄືດັ່ງທີ່ເປັນຢູ່? ນີ້ແມ່ນໝາກຜົນຈາກຄວາມພະຍາຍາມສ່ວນຕົວຂອງເຈົ້າຢ່າງແທ້ຈິງບໍ? ນີ້ແມ່ນຄ່າຕອບແທນສຳລັບການເຮັດວຽກໜັກຢ່າງບໍ່ອິດເມື່ອຍຂອງເຈົ້າບໍ? ນີ້ແມ່ນຮູບພາບທີ່ສວຍງາມທີ່ຈິດໃຈຂອງເຈົ້າໄດ້ຈິນຕະນາການຂຶ້ນບໍ? ຖ້າເຮົາບໍ່ຊີ້ນຳມະນຸດຊາດທຸກຄົນ ແລ້ວແມ່ນໃຜຈະສາມາດແຍກພວກເຂົາອອກຈາກການຈັດແຈງຂອງເຮົາໄດ້ ແລະ ຊອກຫາທາງອອກອື່ນໄດ້? ມັນແມ່ນຈິນຕະນາການ ແລະ ຄວາມປາດຖະໜາຂອງມະນຸດບໍ ທີ່ໄດ້ນຳເອົາເຂົາມາສູ່ປັດຈຸບັນ? ຫຼາຍຄົນໃຊ້ຊີວິດທັງໝົດຂອງພວກເຂົາໂດຍທີ່ບໍ່ມີ ຄວາມປາດຖະໜາທີ່ຈະເຮັດໃຫ້ສຳເລັດ. ນີ້ແມ່ນຍ້ອນຄວາມຜິດໃນຄວາມຄິດຂອງພວກເຂົາແທ້ບໍ? ຊີວິດຂອງຫຼາຍຄົນແມ່ນເຕັມໄປດ້ວຍຄວາມສຸກ ແລະຄວາມເພິ່ງພໍໃຈທີ່ບໍ່ໄດ້ຄາດຫວັງໄວ້. ນີ້ແມ່ນຍ້ອນວ່າ ພວກເຂົາຄາດຫວັງໜ້ອຍເກີນໄປບໍ? ແມ່ນໃຜຈາກມະນຸດຊາດທັງໝົດທີ່ບໍ່ໄດ້ຮັບການເອົາໃຈໃສ່ໃນສາຍຕາຂອງອົງຊົງລິດທານຸພາບສູງສຸດແດ່? ແມ່ນໃຜທີ່ບໍ່ໄດ້ອາໄສຢູ່ໃນທ່າມກາງການລິຂິດຂອງອົງຊົງລິດທານຸພາບສູງສຸດແດ່? ຊີວິດ ແລະຄວາມຕາຍຂອງມະນຸດເກີດຈາກການເລືອກຂອງເຂົາເອງບໍ? ມະນຸດຄວບຄຸມຊະຕາກຳຂອງເຂົາເອງໄດ້ບໍ? ຫຼາຍຄົນຮ້ອງຫາຄວາມຕາຍ ແຕ່ຄວາມຕາຍກໍຍັງໄກຈາກພວກເຂົາຫຼາຍ; ຫຼາຍຄົນຕ້ອງການເປັນຄົນທີ່ເຂັ້ມແຂງໃນຊີວິດ ແລະ ຢ້ານຄວາມຕາຍ ແຕ່ພວກເຂົາກໍບໍ່ຮູ້ວ່າ ມື້ແຫ່ງຄວາມຕາຍຂອງພວກເຂົາແມ່ນໃກ້ເຂົ້າມາແລ້ວ ແລະ ມັນຈະໂຍນພວກເຂົາລົງສູ່ແດນແຫ່ງຄວາມຕາຍ; ຫຼາຍຄົນແນມເບິ່ງທ້ອງຟ້າ ແລະ ຖອນໃຈໃຫຍ່; ຫຼາຍຄົນຮ້ອງໄຫ້ຢ່າງໜັກ, ຮ້ອງໄຫ້ສະອຶກສະອື້ນດ້ວຍຄວາມເສຍໃຈ; ຫຼາຍຄົນຕົກຢູ່ທ່າມກາງການທົດລອງ ແລະ ຫຼາຍຄົນໄດ້ກາຍເປັນນັກໂທດຂອງການລໍ້ລວງ.

ເຖິງແມ່ນວ່າ ເຮົາບໍ່ປາກົດດ້ວຍຕົວເອງເພື່ອອະນຸຍາດໃຫ້ມະນຸດເຫັນເຮົາຢ່າງຊັດເຈນ ແຕ່ຫຼາຍຄົນກໍຢ້ານທີ່ຈະເຫັນໜ້າຂອງເຮົາ, ຢ້ານຫຼາຍວ່າ ເຮົາຈະໂຈມຕີ ແລະ ກຳຈັດພວກເຂົາ. ມະນຸດຮູ້ຈັກເຮົາແທ້ບໍ ຫຼື ເຂົາບໍ່ຮູ້ຈັກເຮົາເລີຍບໍ? ສິ່ງນີ້ບໍ່ມີໃຜສາມາດເວົ້າໄດ້ຢ່າງແນ່ນອນ. ແລ້ວມັນບໍ່ແມ່ນແບບນັ້ນແທ້ບໍ? ພວກເຈົ້າຢ້ານທັງເຮົາ ແລະ ການຂ້ຽນຕີຂອງເຮົາ ແຕ່ພວກເຈົ້າຍັງລຸກຢືນຂຶ້ນ, ຕໍ່ຕ້ານເຮົາ ແລະ ຕັດສິນເຮົາຢ່າງເປີດເຜີຍ. ມັນບໍ່ແມ່ນແນວນັ້ນບໍ? ມະນຸດບໍ່ເຄີຍຮູ້ຈັກເຮົາ ຍ້ອນວ່າເຂົາບໍ່ເຄີຍເຫັນໜ້າຂອງເຮົາ ຫຼື ໄດ້ຍິນສຽງຂອງເຮົາ. ສະນັ້ນ, ເຖິງແມ່ນວ່າ ເຮົາຈະຢູ່ພາຍໃນໃຈຂອງມະນຸດ ແຕ່ໃນໃຈຂອງຜູ້ໃດທີ່ມີເຮົາແບບບໍ່ມືດມົວ ແລະ ສັບສົນແດ່? ໃນໃຈຂອງຜູ້ໃດທີ່ມີເຮົາຢ່າງຊັດເຈນທີ່ສຸດ? ເຮົາບໍ່ປາດຖະໜາ ທີ່ຈະໃຫ້ຜູ້ທີ່ເປັນປະຊາຊົນຂອງເຮົາ ເຫັນເຮົາແບບເລື່ອນລອຍ ແລະ ມືດມົວ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງເລີ່ມພາລະກິດທີ່ຍິ່ງໃຫຍ່ນີ້.

ເຮົາມາຢູ່ທ່າມກາງມະນຸດຢ່າງງຽບໆ ແລະ ເຮົາກໍລອຍຈາກໄປ. ມີໃຜເຄີຍເຫັນເຮົາບໍ່? ດວງຕາເວັນທີ່ສາມາດເຫັນເຮົາ ຍ້ອນແປວໄຟທີ່ເຜົາໄໝ້ຂອງມັນບໍ? ດວງຈັນສາມາດເຫັນເຮົາ ຍ້ອນຄວາມໃສແຈ້ງຂອງມັນບໍ? ດວງດາວທັງຫຼາຍທີ່ສາມາດເຫັນເຮົາ ຍ້ອນພວກມັນຢູ່ໃນທ້ອງຟ້າບໍ? ເມື່ອເຮົາມາ, ມະນຸດແມ່ນບໍ່ຮູ້ຈັກ ແລະ ທຸກສິ່ງກໍຂາດຄວາມຮູ້ ແລະ ເມື່ອເຮົາຈາກໄປ ມະນຸດກໍຍັງບໍ່ຮູ້ຄືເກົ່າ. ແມ່ນໃຜສາມາດເປັນພະຍານໃຫ້ແກ່ເຮົາໄດ້ແດ່? ມັນສາມາດເປັນຄຳສັນລະເສີນຂອງຜູ້ຄົນເທິງແຜ່ນດິນໂລກໄດ້ບໍ? ສາມາດເປັນດອກໄມ້ລີລີທີ່ເບັ່ງບານໃນປ່າໄດ້ບໍ? ເປັນນົກທີ່ບິນຢູ່ເທິງຟ້າໄດ້ບໍ? ເປັນສິງໂຕທີ່ຮ້ອງໃນພູເຂົາໄດ້ບໍ? ບໍ່ມີໃຜສາມາດເປັນພະຍານໃຫ້ກັບເຮົາ! ບໍ່ມີໃຜສາມາດເຮັດພາລະກິດທີ່ເຮົາເຮັດ! ເຖິງແມ່ນວ່າ ພວກເຂົາຈະເຮັດພາລະກິດນີ້ ແຕ່ມັນຈະມີຜົນຫຍັງ? ແຕ່ລະມື້ ເຮົາສັງເກດເບິ່ງທຸກການກະທຳຂອງຫຼາຍຄົນ ແລະ ແຕ່ລະມື້ ເຮົາຊອກຫາຫົວໃຈ ແລະ ຈິດໃຈຂອງຫຼາຍຄົນ; ບໍ່ມີໃຜເຄີຍໜີພົ້ນຈາກການພິພາກສາຂອງເຮົາ ແລະ ບໍ່ມີໃຜເຄີຍຫຼົບຫຼີກຈາກຄວາມເປັນຈິງຂອງການພິພາກສາຂອງເຮົາໄດ້. ເຮົາຢືນຢູ່ເທິງຟ້າ ແລະ ຫຼຽວເບິ່ງຢ່າງກວ້າງໄກ: ຈຳນວນຄົນທີ່ນັບບໍ່ຖ້ວນຖືກເຮົາຕີລົງ ແລະ ເຊັ່ນດຽວກັນ ກໍມີຈຳນວນຄົນທີ່ນັບບໍ່ຖ້ວນດຳລົງຊີວິດຢູ່ທ່າມກາງຄວາມກະລຸນາ ແລະ ຄວາມຮັກຂອງເຮົາ. ພວກເຈົ້າບໍ່ໄດ້ດຳລົງຊີວິດຢູ່ພາຍໃຕ້ສະຖານະການດັ່ງກ່າວນີ້ເຊັ່ນກັນບໍ?

ວັນທີ 5 ມີນາ 1992

# ບົດທີ 12

ເມື່ອຟ້າແມບເຫຼື້ອມຈາກທິດຕາເວັນອອກ ເຊິ່ງຍັງແມ່ນຊ່ວງເວລາ ທີ່ເຮົາໄດ້ເລີ່ມກ່າວພຣະທຳຂອງເຮົາ. ເມື່ອຟ້າແມບເຫຼື້ອມ ເຮັດໃຫ້ຈັກກະວານທັງໝົດມີແສງສະຫວ່າງ ແລະ ມີການປ່ຽນແປງເກີດຂຶ້ນໃນດວງດາວທັງໝົດ. ມັນຄືກັບວ່າ ເຜົ່າພັນມະນຸດທັງໝົດຖືກຈັດແຈງ. ພາຍໃຕ້ການເຮືອງແສງສະຫວ່າງນີ້ຈາກທິດຕາເວັນອອກ, ມະນຸດທຸກຄົນຖືກເປີດເຜີຍຮູບຮ່າງທີ່ແທ້ຈິງຂອງພວກເຂົາ, ຕາຂອງພວກເຂົາມືດມົວ ໂດຍບໍ່ແນ່ໃຈວ່າຈະເຮັດແນວໃດ ແລະ ຍິ່ງບໍ່ແນ່ໃຈວ່າ ຈະປົດບັງໜ້າຕາອັນຂີ້ຮ້າຍຂອງພວກເຂົາແນວໃດດີ. ພວກເຂົາຍັງຄືກັບສັດທີ່ແລ່ນໜີຈາກແສງສະຫວ່າງຂອງເຮົາ ແລະໄປລີ້ໄພຢູ່ໃນຖໍ້າເທິງພູເຂົາ ແຕ່ບໍ່ມີຜູ້ໃດໃນບັນດາພວກເຂົາສາມາດຫຼົບໜີຈາກແສງສະຫວ່າງຂອງເຮົາໄດ້. ມະນຸດທຸກຄົນແມ່ນພາກັນຕື່ນຕົກໃຈ, ທຸກຄົນກຳລັງລໍຖ້າ, ທຸກຄົນກຳລັງເຝົ້າເບິ່ງ; ພ້ອມກັບການມາຂອງແສງສະຫວ່າງຂອງເຮົາ, ທຸກຄົນດີໃຈໃນມື້ທີ່ພວກເຂົາເກີດ ແລະ ໃນທຳນອງດຽວກັນທຸກຄົນກໍສາບແຊ່ງມື້ທີ່ພວກເຂົາເກີດ. ຄວາມຮູ້ສຶກຢ່າງສັບສົນແມ່ນບໍ່ສາມາດອະທິບາຍໄດ້; ນໍ້າຕາຈາກການລົງໂທດຕົວເອງກາຍເປັນແມ່ນໍ້າ ແລະ ທັນທີໃດກໍຖືກກະແສນໍ້າພັດຫາມໄປໂດຍບໍ່ມີຮ່ອງຮອຍ. ມື້ຂອງເຮົາໄດ້ເຂົ້າມາໃກ້ມະນຸດທຸກຄົນອີກຄັ້ງ, ມັນໄດ້ປຸກເຜົ່າພັນມະນຸດໃຫ້ຕື່ນອີກຄັ້ງໂດຍມອບການເລີ່ມຕົ້ນໃໝ່ໃຫ້ແກ່ມະນຸດຊາດ. ຫົວໃຈຂອງເຮົາເຕັ້ນ ແລະ ພູເຂົາກໍໂດດຂຶ້ນເຕັ້ນດ້ວຍຄວາມດີໃຈຕາມຈັງວະເຕັ້ນຂອງຫົວໃຈຂອງເຮົາ, ແມ່ນໍ້າເຕັ້ນລຳດ້ວຍຄວາມດີໃຈ ແລະ ຄື້ນທະເລກໍຟັດເຟືອນໃສ່ໂງ່ນຫີນ. ມັນຍາກທີ່ຈະອະທິບາຍເຖິງສິ່ງທີ່ຢູ່ໃນໃຈຂອງເຮົາ. ເຮົາຕ້ອງການເຮັດໃຫ້ສິ່ງທີ່ສົກກະປົກຖືກເຜົາໄໝ້ເປັນຂີ້ເທົ່າພາຍໃຕ້ສາຍຕາຂອງເຮົາ; ເຮົາຕ້ອງການເຮັດໃຫ້ບຸດຊາຍທີ່ບໍ່ເຊື່ອຟັງທຸກຄົນຫາຍໄປຈາກສາຍຕາຂອງເຮົາ ໂດຍບໍ່ມີວັນລັງເລໃນການມີຊີວິດຢູ່ອີກ. ເຮົາບໍ່ພຽງແຕ່ໄດ້ສ້າງການເລີ່ມຕົ້ນໃໝ່ໃນບ່ອນອາໄສຂອງມັງກອນແດງທີ່ຍິ່ງໃຫຍ່ ແຕ່ເຮົາຍັງໄດ້ເລີ່ມພາລະກິດໃໝ່ໃນຈັກກະວານ. ອີກບໍ່ດົນ ອານາຈັກຕ່າງໆຂອງແຜ່ນດິນໂລກຈະກາຍເປັນອານາຈັກຂອງເຮົາ; ອີກບໍ່ດົນອານາຈັກຕ່າງໆຂອງແຜ່ນດິນໂລກຈະບໍ່ມີຢູ່ອີກຕະຫຼອດການ ຍ້ອນອານາຈັກຂອງເຮົາ, ຍ້ອນເຮົາໄດ້ຮັບໄຊຊະນະແລ້ວ ແລະ ຍ້ອນເຮົາໄດ້ກັບມາຢ່າງມີໄຊ. ມັງກອນແດງທີ່ຍິ່ງໃຫຍ່ໄດ້ພະຍາຍາມທຸກວິທີການທີ່ເປັນໄປໄດ້ ເພື່ອທຳລາຍແຜນການຂອງເຮົາ ໂດຍຫວັງທີ່ຈະລຶບລ້າງພາລະກິດຂອງເຮົາອອກຈາກແຜ່ນດິນໂລກ ແຕ່ກົນອຸບາຍອັນຫຼອກລວງຂອງມັນຈະສາມາດເຮັດໃຫ້ເຮົາໝົດກຳລັງໃຈໄດ້ບໍ? ການຂົ່ມຂູ່ຂອງມັນຈະສາມາດເຮັດໃຫ້ເຮົາຕົກໃຈຈົນສູນເສຍຄວາມໝັ້ນໃຈບໍ? ບໍ່ເຄີຍມີສິ່ງມີຊີວິດແມ່ນແຕ່ໜຶ່ງຊີວິດໃນສະຫວັນ ຫຼື ຢູ່ເທິງແຜ່ນດິນໂລກ ທີ່ເຮົາບໍ່ໄດ້ກຳໄວ້ໃນກຳມືຂອງເຮົາ; ສິ່ງນີ້ຍິ່ງເປັນຈິງຫຼາຍສໍ່າໃດກັບມັງກອນແດງທີ່ຍິ່ງໃຫຍ່, ອຸປະກອນນີ້ທີ່ຮັບໃຊ້ເປັນຕົວປະກອບໃຫ້ເຮົາ? ມັນບໍ່ແມ່ນວັດຖຸທີ່ຖືກຄວບຄຸມດ້ວຍມືຂອງເຮົາເຊັ່ນກັນບໍ?

ໃນລະຫວ່າງການບັງເກີດເປັນມະນຸດຂອງເຮົາໃນໂລກມະນຸດ, ພາຍໃຕ້ການຊີ້ນຳຂອງເຮົາ ມະນຸດໄດ້ມາຮອດຍຸກນີ້ໂດຍທີ່ບໍ່ຮູ້ຕົວ ແລະ ໄດ້ຮູ້ຈັກເຮົາໂດຍບໍ່ຮູ້ຕົວ. ແຕ່ສຳລັບວິທີຍ່າງເສັ້ນທາງທີ່ຢູ່ຂ້າງ

ໜ້ານັ້ນບໍ່ມີຜູ້ໃດມີແນວຄິດແມ່ນແຕ່ໜ້ອຍດຽວ ຫຼື ບໍ່ມີຜູ້ໃດຮູ້ເລີຍ ແລະ ແຮງໄກທີ່ຈະມີຜູ້ໃດຮູ້ວ່າເສັ້ນທາງນັ້ນຈະພາພວກເຂົາໄປໃນທິດທາງໃດ. ມີພຽງການເຝົ້າເບິ່ງຂອງພຣະອົງຜູ້ຊົງລິດທານຸພາບສູງສຸດເທົ່ານັ້ນ ພວກເຂົາຈຶ່ງຈະສາມາດຍ່າງຕາມເສັ້ນທາງໄປເຖິງທີ່ສຸດໄດ້; ມີພຽງການຊີ້ນຳໂດຍຟ້າແມບເຫຼື້ອມໃນທິດຕາເວັນອອກເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດຜ່ານທາງເຂົ້າທີ່ນຳໄປສູ່ອານາຈັກຂອງເຮົາໄດ້. ໃນທ່າມກາງມະນຸດ ແມ່ນບໍ່ເຄີຍມີຜູ້ໃດທີ່ໄດ້ເຫັນໃບໜ້າຂອງເຮົາ, ບໍ່ມີຜູ້ໃດເຫັນສາຍຟ້າແມບໃນທິດຕາເວັນອອກ; ແລ້ວຈະມີຄົນໜ້ອຍສໍ່າໃດທີ່ໄດ້ຍິນພຣະວັດຈະນະຈາກບັນລັງຂອງເຮົາ? ທີ່ຈິງແລ້ວ ນັບຕັ້ງແຕ່ຍຸກບູຮານ ບໍ່ມີມະນຸດແມ່ນແຕ່ຄົນດຽວ ທີ່ໄດ້ມາພົວພັນໂດຍກົງກັບຕົວຕົນຂອງເຮົາ; ມີພຽງໃນປັດຈຸບັນເທົ່ານັ້ນ ເມື່ອເຮົາໄດ້ມາສູ່ໂລກ ມະນຸດຈຶ່ງມີໂອກາດເຫັນເຮົາ. ແຕ່ເຖິງຕອນນີ້ມະນຸດກໍຍັງບໍ່ຮູ້ຈັກເຮົາ, ພວກເຂົາພຽງແຕ່ເບິ່ງໜ້າເຮົາ ແລະ ໄດ້ຍິນສຽງຂອງເຮົາເທົ່ານັ້ນ ແຕ່ຍັງບໍ່ເຂົ້າໃຈຄວາມໝາຍຂອງເຮົາ. ມະນຸດທຸກຄົນແມ່ນເປັນແບບນີ້. ໃນຖານະທີ່ເປັນໜຶ່ງໃນບັນດາປະຊາຊົນຂອງເຮົາ, ພວກເຈົ້າບໍ່ຮູ້ສຶກພາກພູມໃຈຢ່າງຍິ່ງບໍ ເມື່ອພວກເຈົ້າເຫັນໜ້າຂອງເຮົາ? ພວກເຈົ້າບໍ່ຮູ້ສຶກອັບອາຍຢ່າງໜ້າສົງສານບໍ ທີ່ພວກເຈົ້າບໍ່ຮູ້ຈັກເຮົາ? ເຮົາຍ່າງຢູ່ທ່າມກາງມະນຸດ ແລະ ເຮົາດຳລົງຊີວິດໃນທ່າມກາງມະນຸດ ເພາະວ່າເຮົາໄດ້ກາຍເປັນເນື້ອໜັງ ແລະ ເຮົາໄດ້ມາສູ່ໂລກມະນຸດ. ເປົ້າໝາຍຂອງເຮົາບໍ່ພຽງແຕ່ເຮັດໃຫ້ມະນຸດສາມາດເບິ່ງເນື້ອໜັງຂອງເຮົາ; ຍິ່ງສຳຄັນໄປກວ່ານັ້ນ, ມັນແມ່ນເພື່ອເຮັດໃຫ້ມະນຸດສາມາດຮູ້ຈັກເຮົາ. ຍິ່ງໄປກວ່ານັ້ນ, ເຮົາຈະລົງໂທດມະນຸດຍ້ອນບາບຂອງພວກເຂົາຜ່ານເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາ; ເຮົາຈະດັບສູນມັງກອນແດງທີ່ຍິ່ງໃຫຍ່ ແລະ ທຳລາຍລ້າງຖໍ້າຂອງມັນຜ່ານເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາ.

ເຖິງວ່າ ມະນຸດທີ່ອາໄສຢູ່ໃນແຜ່ນດິນໂລກຈະມີຫຼາຍຄືກັບດວງດາວ ແຕ່ເຮົາກໍຮູ້ພວກເຂົາທຸກຄົນຢ່າງຊັດເຈນຄືກັບຝາມືເຮົາເອງ. ເຖິງວ່າ ມະນຸດທີ່ "ຮັກ" ເຮົາຈະມີຫຼາຍຈົນນັບບໍ່ຖ້ວນຄືກັບເມັດຊາຍໃນທະເລ ແຕ່ຈະມີບາງຄົນເທົ່ານັ້ນທີ່ຈະຖືກເຮົາເລືອກ: ມີພຽງແຕ່ຜູ້ທີ່ສະແຫວງຫາແສງສະຫວ່າງເທົ່ານັ້ນ ທີ່ຈະຖືກແຍກອອກຈາກຜູ້ທີ່ "ຮັກ" ເຮົາ. ເຮົາບໍ່ໄດ້ປະເມີນຄ່າມະນຸດສູງເກີນໄປ ແລະ ເຮົາບໍ່ໄດ້ປະເມີນຄ່າເຂົາຕໍ່າເກີນໄປ; ກົງກັນຂ້າມ, ເຮົາຮຽກຮ້ອງມະນຸດຕາມລັກສະນະທຳມະຊາດຂອງເຂົາ ແລະ ດ້ວຍເຫດນັ້ນ ສິ່ງທີ່ເຮົາຕ້ອງການແມ່ນຄົນປະເພດທີ່ສະແຫວງຫາເຮົາຢ່າງຈິງໃຈ ຜູ້ທີ່ຈະເຮັດໃຫ້ເຮົາບັນລຸເປົ້າໝາຍຂອງເຮົາໃນການເລືອກຜູ້ຄົນ. ມີສັດຮ້າຍຢ່າງຫຼວງຫຼາຍເທິງພູເຂົາ ແຕ່ພວກມັນທຸກໂຕເຊື່ອຟັງເຮົາຄືດັ່ງໂຕແກະທີ່ຢູ່ຕໍ່ໜ້າເຮົາ; ມີຄວາມລຶກລັບທີ່ຍັງບໍ່ເຖິງນອນຢູ່ກ້ອງຄື້ນທະເລ ແຕ່ພວກມັນສະແດງຕົວເອງຕໍ່ເຮົາຢ່າງຊັດເຈນຄືກັບທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກ; ໃນສະຫວັນເບື້ອງເທິງແມ່ນອານາຈັກທີ່ມະນຸດບໍ່ມີວັນຈະໄປເຖິງ ແຕ່ເຮົາກໍຍ່າງໄປມາຢ່າງອິດສະຫຼະໃນອານາຈັກເຫຼົ່ານັ້ນທີ່ບໍ່ສາມາດເຂົ້າເຖິງໄດ້. ມະນຸດບໍ່ເຄີຍຮູ້ຈັກເຮົາໃນແສງສະຫວ່າງ ແຕ່ເຫັນເຮົາໃນໂລກແຫ່ງຄວາມມືດເທົ່ານັ້ນ. ພວກເຈົ້າບໍ່ໄດ້ຢູ່ໃນສະພາບດຽວກັນກັບໃນປັດຈຸບັນບໍ? ມັນແມ່ນໃນຈຸດສູງສຸດຂອງການອາລະວາດຂອງມັງກອນແດງທີ່ຍິ່ງໃຫຍ່ ທີ່ເຮົາໄດ້ກາຍມາເປັນເນື້ອໜັງຢ່າງເປັນທາງການເພື່ອປະຕິບັດພາລະກິດຂອງເຮົາ. ເມື່ອມັງກອນແດງທີ່ຍິ່ງໃຫຍ່ເປີດເຜີຍຮູບຮ່າງທີ່ແທ້ຈິງຂອງມັນເປັນ

ຄັ້ງທຳອິດ ເຮົາກໍເປັນພະຍານໃຫ້ແກ່ນາມຂອງເຮົາ. ເມື່ອເຮົາຍ່າງໄປມາຢູ່ຖະໜົນຂອງມະນຸດຊາດ, ບໍ່ມີສິ່ງມີຊີວິດແມ່ນແຕ່ໜຶ່ງຊີວິດ ແລະ ມະນຸດແມ່ນແຕ່ໜຶ່ງຄົນ ທີ່ຕົກໃຈຈົນສະດຸ້ງຕື່ນ ແລະ ດ້ວຍເຫດນັ້ນ ເມື່ອເຮົາບັງເກີດເປັນມະນຸດໃນໂລກມະນຸດ ຈຶ່ງບໍ່ມີໃຜຮູ້ເຖິງສິ່ງນີ້. ແຕ່ເມື່ອເຮົາເລີ່ມປະຕິບັດພາລະກິດຂອງເຮົາໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາ, ສຽງຂອງເຮົາທີ່ດັ່ງຄືສຽງຟ້າຮ້ອງກໍໄດ້ປຸກມວນມະນຸດ ແລະ ເຮັດໃຫ້ພວກເຂົາຕື່ນຈາກຄວາມຝັນຂອງພວກເຂົາ ແລະ ນັບແຕ່ນັ້ນມາພວກເຂົາກໍໄດ້ເລີ່ມຕົ້ນຊີວິດຂອງພວກເຂົາພາຍໃຕ້ການຊີ້ນໍາຂອງເຮົາ. ໃນທ່າມກາງຜູ້ຄົນ ເຮົາໄດ້ເລີ່ມພາລະກິດຂອງເຮົາອີກຄັ້ງ. ການທີ່ໄດ້ເວົ້າວ່າ ພາລະກິດຂອງເຮົາຍັງບໍ່ສຳເລັດ ແມ່ນພຽງພໍທີ່ຈະສະແດງໃຫ້ເຫັນວ່າ ປະຊາຊົນຂອງເຮົາທີ່ເຮົາໄດ້ກ່າວເຖິງນັ້ນບໍ່ແມ່ນຜູ້ທີ່ເຮົາຕ້ອງການໃນໃຈຂອງເຮົາ ແຕ່ຢ່າງໃດກໍຕາມ ເຮົາຍັງຈະເລືອກບາງຄົນຈາກທ່າມກາງພວກເຂົາ. ຈາກສິ່ງນີ້ມັນຊັດເຈນແລ້ວວ່າ ເຮົາບໍ່ພຽງແຕ່ເຮັດໃຫ້ປະຊາຊົນຂອງເຮົາສາມາດຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນ ແຕ່ຍັງຊໍາລະລ້າງພວກເຂົາອີກດ້ວຍ. ເນື່ອງຈາກຄວາມຮຸນແຮງຂອງພຣະກໍາລັດແຫ່ງການປົກຄອງຂອງເຮົາ, ຄົນສ່ວນໃຫຍ່ຈຶ່ງຍັງຢູ່ໃນອັນຕະລາຍຈາກການຖືກເຮົາກໍາຈັດ. ນອກຈາກວ່າ ພວກເຈົ້າຈະໃຊ້ຄວາມພະຍາຍາມຢ່າງໜັກ ເພື່ອຈັດການກັບຕົວເອງ, ເພື່ອເອົາຊະນະຕົວເອງ ເຊິ່ງນອກຈາກວ່າ ພວກເຈົ້າຈະເຮັດສິ່ງນີ້ ພວກເຈົ້າຈະກາຍເປັນສິ່ງທີ່ເຮົາລັງກຽດ ແລະ ປະຕິເສດຢ່າງແນ່ນອນ ໂດຍຈະຖືກຖິ້ມລົງໄປນະຮົກຢ່າງບໍ່ມີທາງໜີພົ້ນໄດ້ ຄືກັບໂປໂລຜູ້ທີ່ໄດ້ຮັບການຂ້ຽນຕີຈາກມືຂອງເຮົາ. ພວກເຈົ້າໄດ້ຮຽນຮູ້ບາງສິ່ງຈາກພຣະທໍາຂອງເຮົາບໍ? ດັ່ງທີ່ຜ່ານມາ, ມັນແມ່ນເຈດຕະນາຂອງເຮົາທີ່ຈະຊໍາລະລ້າງຄຣິສຕະຈັກເພື່ອສືບຕໍ່ເຮັດໃຫ້ຜູ້ຄົນທີ່ເຮົາຕ້ອງການບໍລິສຸດ ເພາະວ່າເຮົາຄືພຣະເຈົ້າ ຜູ້ທີ່ບໍລິສຸດ ແລະ ສົມບູນທີ່ສຸດ. ເຮົາຈະສ້າງພຣະວິຫານຂອງເຮົາ ບໍ່ແມ່ນພຽງເພື່ອເຮັດໃຫ້ມັນມີສີຮຸ້ງເທົ່ານັ້ນ ແຕ່ຍັງຈະເຮັດໃຫ້ມັນຂາວສະອາດທັງພາຍໃນ ແລະ ພາຍນອກ. ເມື່ອຢູ່ຕໍ່ໜ້າເຮົາ, ພວກເຈົ້າທຸກຄົນຄວນຄິດຄືນຫຼັງກ່ຽວກັບສິ່ງທີ່ພວກເຈົ້າໄດ້ເຮັດໃນອະດີດ ແລະ ຕັດສິນໃຈວ່າ ໃນປັດຈຸບັນພວກເຈົ້າສາມາດຕັ້ງໃຈມອບຄວາມເພິ່ງພໍໃຈທີ່ສົມບູນໃຫ້ແກ່ເຮົາໄດ້ ຫຼື ບໍ່.

ມະນຸດບໍ່ພຽງແຕ່ຈະບໍ່ຮູ້ຈັກເຮົາໃນເນື້ອໜັງເທົ່ານັ້ນ; ຍິ່ງໄປກວ່ານັ້ນ, ເຂົາບໍ່ສາມາດເຂົ້າໃຈຕົວເອງທີ່ອາໄສຢູ່ໃນຮ່າງກາຍທີ່ເປັນເນື້ອໜັງ. ເປັນເວລາຫຼາຍປີ, ມະນຸດໄດ້ຫຼອກລວງເຮົາ ໂດຍປະຕິບັດກັບເຮົາຄືກັບແຂກພາຍນອກ. ຫຼາຍຄັ້ງ ພວກເຂົາໄດ້ "ອັດປະຕູເຮືອນຂອງພວກເຂົາ" ໂດຍປ່ອຍໃຫ້ເຮົາຢູ່ຂ້າງນອກ; ຫຼາຍຄັ້ງ ເມື່ອຢືນຢູ່ຕໍ່ໜ້າເຮົາ, ພວກເຂົາບໍ່ສົນໃຈເຮົາ; ຫຼາຍຄັ້ງ ພວກເຂົາໄດ້ປະຖິ້ມເຮົາໃນທ່າມກາງຄົນອື່ນໆ; ຫຼາຍຄັ້ງ ພວກເຂົາໄດ້ປະຕິເສດເຮົາເມື່ອຢູ່ຕໍ່ໜ້າຜີຮ້າຍ; ແລະ ຫຼາຍຄັ້ງທີ່ພວກເຂົາໄດ້ໂຈມຕີເຮົາດ້ວຍປາກແຂງຂອງພວກເຂົາ. ແຕ່ເຮົາບໍ່ໄດ້ບັນທຶກຄວາມອ່ອນແອຂອງມະນຸດ ແລະ ເນື່ອງຈາກຄວາມບໍ່ເຊື່ອຟັງຂອງເຂົາ ເຮົາກໍບໍ່ຂໍເອົາແຂ້ວມາແລກກັບແຂ້ວ. ສິ່ງດຽວທີ່ເຮົາໄດ້ເຮັດແມ່ນໃຫ້ຢາກັບຄວາມເຈັບເປັນຂອງເຂົາ ເພື່ອຮັກສາພະຍາດທີ່ຮັກສາບໍ່ໄດ້ຂອງເຂົາເພື່ອເປັນການຟື້ນຟູສຸຂະພາບຂອງເຂົາ ເພື່ອວ່າເຂົາອາດຈະຮູ້ຈັກເຮົາ. ແລ້ວທຸກສິ່ງທີ່ເຮົາເຮັດບໍ່ແມ່ນເພື່ອການຢູ່ລອດຂອງມະນຸດ ແລະ ເພື່ອໃຫ້ໂອກາດຊີວິດແກ່ມະນຸດບໍ? ເຮົາໄດ້ມາສູ່ໂລກຂອງມະນຸດເປັນເວລາຫຼາຍຄັ້ງ

ແຕ່ມະນຸດບໍ່ໄດ້ນັບຖືເຮົາ ຍ້ອນເຮົາໄດ້ມາສູ່ໂລກດ້ວຍຕົວຕົນຂອງເຮົາເອງ; ກົງກັນຂ້າມ, ແຕ່ລະຄົນເຮັດຕາມທີ່ເຂົາເຫັນວ່າເໝາະສົມ ແລະ ຊອກຫາທາງອອກເພື່ອຕົວເອງ. ພວກເຂົາບໍ່ຮູ້ເລີຍວ່າ ທຸກເສັ້ນທາງທີ່ຢູ່ລຸ່ມສະຫວັນແມ່ນມາຈາກມືຂອງເຮົາ! ພວກເຂົາບໍ່ຮູ້ເລີຍວ່າ ທຸກສິ່ງທີ່ຢູ່ລຸ່ມສະຫວັນແມ່ນຢູ່ພາຍໃຕ້ການບັນຊາຂອງເຮົາ! ຜູ້ໃດໃນບັນດາພວກເຈົ້າທີ່ກ້າມີຄວາມບໍ່ພໍໃຈໃນຫົວໃຈຂອງຕົນເອງບໍ່? ຜູ້ໃດໃນບັນດາພວກເຈົ້າທີ່ກ້າເຫັນດີແບບບໍ່ຈິງຈັງບໍ່? ເຮົາພຽງແຕ່ປະຕິບັດພາລະກິດຂອງເຮົາໃນທ່າມກາງມະນຸດຢ່າງງຽບໆ ເທົ່ານັ້ນເອງ. ໃນໄລຍະຂອງການບັງເກີດເປັນມະນຸດຂອງເຮົາ, ຖ້າເຮົາບໍ່ເຫັນອົກເຫັນໃຈຕໍ່ຄວາມອ່ອນແອຂອງມະນຸດ ແລ້ວຄວາມເປັນມະນຸດທຸກຄົນກໍຈະຕົກໃຈຈົນເຮັດຫຍັງບໍ່ຖືກຍ້ອນການບັງເກີດເປັນມະນຸດຂອງເຮົາ ແລະ ດ້ວຍເຫດນັ້ນ ກໍຈະຕົກສູ່ແດນມໍລະນາ. ມັນເປັນຍ້ອນວ່າເຮົາຖ່ອມຕົນເອງ ແລະ ໄດ້ເຊື່ອງຊ້ອນຕົນເອງ ມະນຸດຈຶ່ງໄດ້ລອດພົ້ນຈາກຄວາມຫາຍະນະ, ໄດ້ລອດພົ້ນຈາກການຂ້ຽນຕີຂອງເຮົາ ແລະ ດັ່ງນັ້ນ ຈຶ່ງໄດ້ມາເຖິງປັດຈຸບັນ. ເມື່ອຮູ້ແລ້ວວ່າມັນລຳບາກພຽງໃດກ່ອນຈະມາເຖິງປັດຈຸບັນ, ແລ້ວພວກເຈົ້າຍິ່ງບໍ່ຄວນຖະໜອມອະນາຄົດທີ່ຍັງບໍ່ທັນມາເຖິງໃຫ້ຫຼາຍກວ່ານີ້ບໍ?

ວັນທີ 8 ມີນາ 1992

# ບົດທີ 13

ພາຍໃນພຣະທຳ ແລະ ພຣະວັດຈະນະຂອງເຮົາ ແມ່ນມີເຈດຕະນາຈຳນວນໜຶ່ງຂອງເຮົາທີ່ເຊື່ອງຊ້ອນຢູ່ ແຕ່ຜູ້ຄົນບໍ່ຮູ້ຈັກ ແລະ ເຂົ້າໃຈສິ່ງເຫຼົ່ານີ້; ພວກເຂົາໄດ້ຮັບພຣະທຳຂອງເຮົາຈາກພາຍນອກ ແລະ ປະຕິບັດຕາມພຣະທຳເຫຼົ່ານັ້ນຈາກພາຍນອກ ແລະ ພວກເຂົາບໍ່ສາມາດເຂົ້າໃຈຫົວໃຈຂອງເຮົາ ຫຼື ຢັ່ງຮູ້ຄວາມປະສົງຂອງເຮົາຈາກພາຍໃນພຣະທຳຂອງເຮົາ. ເຖິງແມ່ນວ່າ ເຮົາໄດ້ເຮັດໃຫ້ພຣະທຳຂອງເຮົາຊັດເຈນ ແຕ່ມີໃຜແດ່ທີ່ເຂົ້າໃນສິ່ງເຫຼົ່ານັ້ນ? ເຮົາລົງມາສູ່ມະນຸດຈາກພູເຂົາຊີໂອນ. ຍ້ອນເຮົາໄດ້ສວມໃສ່ຄວາມເປັນມະນຸດທຳມະດາ ແລະ ໜັງຂອງມະນຸດ, ຜູ້ຄົນຈຶ່ງຮູ້ແຕ່ຮູບຮ່າງຂອງເຮົາຈາກພາຍນອກ ແຕ່ພວກເຂົາບໍ່ຮູ້ຈັກຊີວິດພາຍໃນຕົວເຮົາ ແລະ ພວກເຂົາບໍ່ຮູ້ພຣະເຈົ້າແຫ່ງພຣະວິນຍານ ແລະ ພຽງແຕ່ຮູ້ຈັກມະນຸດໃນເນື້ອໜັງເທົ່ານັ້ນ. ພຣະເຈົ້າທີ່ແທ້ຈິງແມ່ນບໍ່ຄູ່ຄວນກັບຄວາມພະຍາຍາມຂອງພວກເຈົ້າໃນການຮູ້ຈັກພຣະອົງບໍ? ພຣະເຈົ້າທີ່ແທ້ຈິງບໍ່ສາມາດຄູ່ຄວນກັບຄວາມພະຍາຍາມຂອງພວກເຈົ້າໃນການ "ວິເຄາະ" ພຣະອົງຢ່າງລະອຽດບໍ? ເຮົາກຽດຊັງຄວາມເສື່ອມຊາມຂອງເຜົ່າພັນມະນຸດທັງໝົດ ແຕ່ເຮົາຮູ້ສຶກເຫັນໃຈຄວາມອ່ອນແອຂອງພວກເຂົາ. ເຮົາຍັງຈັດການກັບທຳມະຊາດເກົ່າຂອງເຜົ່າພັນມະນຸດທັງໝົດ. ໃນຖານະທີ່ເປັນໜຶ່ງໃນປະຊາຊົນຂອງເຮົາຢູ່ປະເທດຈີນ, ພວກເຈົ້າບໍ່ໄດ້ເປັນສ່ວນໜຶ່ງຂອງເຜົ່າພັນມະນຸດເຊັ່ນກັນບໍ? ໃນທ່າມກາງປະຊາຊົນຂອງເຮົາທຸກຄົນ ແລະ ໃນທ່າມກາງບຸດຊາຍຂອງເຮົາທຸກຄົນ ນັ້ນກໍຄືໃນທ່າມກາງຜູ້ທີ່ເຮົາໄດ້ເລືອກຈາກເຜົ່າພັນມະນຸດທັງໝົດ, ພວກເຈົ້າແມ່ນເປັນກຸ່ມທີ່ຕໍ່າຕ້ອຍທີ່ສຸດ. ດ້ວຍເຫດຜົນນີ້, ເຮົາຈຶ່ງໃຊ້ພະລັງສ່ວນໃຫຍ່ກັບພວກເຈົ້າເຊິ່ງເປັນຄວາມພະຍາຍາມທີ່ຫຼາຍທີ່ສຸດ. ພວກເຈົ້າຍັງບໍ່ຖະໜອມຊີວິດທີ່ໄດ້ຮັບພອນ ທີ່ພວກເຈົ້າມີຄວາມສຸກນຳໃນປັດຈຸບັນບໍ? ພວກເຈົ້າຍັງເຮັດໃຫ້ຫົວໃຈຂອງພວກເຈົ້າແຂງກະດ້າງ ເພື່ອກະບົດຕໍ່ເຮົາ ແລະ ມຸ່ງໝັ້ນເຮັດຕາມຄວາມຕັ້ງໃຈຂອງຕົວເອງບໍ? ຖ້າບໍ່ແມ່ນຍ້ອນຄວາມເມດຕາ ແລະ ຄວາມຮັກອັນຕໍ່ເນື່ອງຂອງເຮົາ ມະນຸດຊາດທັງໝົດແມ່ນຖືກຊາຕານຈັບກຸມແຕ່ດົນນານແລ້ວ ແລະ ກາຍເປັນ "ອາຫານແຊບໜຶ່ງຄຳ" ໃນປາກຂອງມັນ. ໃນປັດຈຸບັນ, ໃນທ່າມກາງທຸກຄົນ, ຜູ້ທີ່ສະຫຼະຕົວເອງເພື່ອເຮົາຢ່າງແທ້ຈິງ ແລະ ຮັກເຮົາຢ່າງແທ້ຈິງແມ່ນບໍ່ມີພໍ ທີ່ຈະນັບດ້ວຍນິ້ວມືຂ້າງໜຶ່ງໄດ້. ໃນປັດຈຸບັນ, ຕຳແໜ່ງ "ປະຊາຊົນຂອງເຮົາ" ສາມາດເປັນຊັບສິນສ່ວນຕົວຂອງພວກເຈົ້າໄດ້ບໍ? ສາມັນສຳນຶກຂອງເຈົ້າໄດ້ເຢັນຄືນໍ້າກ້ອນແທ້ບໍ? ເຈົ້າຄູ່ຄວນທີ່ຈະເປັນປະຊາຊົນທີ່ເຮົາຕ້ອງການບໍ? ໃຫ້ຄິດຄືນຫຼັງໃນອະດີດ ແລະ ເບິ່ງປັດຈຸບັນອີກຄັ້ງ. ພວກເຈົ້າຜູ້ໃດທີ່ໄດ້ເຮັດໃຫ້ເຮົາພໍໃຈ? ພວກເຈົ້າຜູ້ໃດທີ່ໄດ້ສະແດງຄວາມເປັນຫ່ວງຢ່າງແທ້ຈິງຕໍ່ເຈດຕະນາຂອງເຮົາ? ຖ້າເຮົາບໍ່ໄດ້ເຕືອນພວກເຈົ້າ, ພວກເຈົ້າກໍຍັງຈະບໍ່ຕື່ນຕົວ ແຕ່ຍັງຈະຢູ່ຄືເກົ່າ ຄືກັບວ່າແຂງເປັນນໍ້າກ້ອນ ແລະ ອີກເທື່ອໜຶ່ງ ຄືກັບວ່າຢູ່ໃນການຈຳສິນໃນລະດູໜາວ.

ໃນທ່າມກາງຄື້ນທະເລທີ່ປັ່ນປ່ວນ, ມະນຸດໄດ້ເຫັນຄວາມໂກດຮ້າຍຂອງເຮົາ; ໃນຄື້ນເມກສີດຳທີ່ເລື່ອນໄຫຼໄປມາ, ມະນຸດຮູ້ສຶກຕົກໃຈ ແລະ ຢ້ານກົວ ແລະ ບໍ່ຮູ້ວ່າ ຈະໜີໄປບ່ອນໃດ ຄືກັບວ່າ

ມີຄວາມຢ້ານກົວວ່າ ສຽງຟ້າຮ້ອງ ແລະ ຝົນຈະພັດເອົາພວກເຂົາໄປ. ຫຼັງຈາກນັ້ນ ເມື່ອພາຍຸຫິມະໄດ້ພັດຜ່ານໄປ ອາລົມຂອງພວກເຂົາກໍຮູ້ສຶກດີ ແລະ ແຈ່ມໃສຂຶ້ນ ໃນຂະນະທີ່ພວກເຂົາມີຄວາມສຸກກັບທິວທັດທີ່ງົດງາມຂອງທຳມະຊາດ. ແຕ່ໃນຊ່ວງເວລາດັ່ງກ່າວ ຜູ້ໃດໃນບັນດາພວກເຂົາ ໄດ້ເຄີຍປະສົບກັບຄວາມຮັກທີ່ບໍ່ມີຂອບເຂດ ທີ່ເຮົາມີໃຫ້ແກ່ມວນມະນຸດບໍ່? ໃນໃຈຂອງພວກເຂົາແມ່ນມີແຕ່ຮູບຮ່າງຂອງເຮົາເທົ່ານັ້ນ ແຕ່ບໍ່ມີແກ່ນແທ້ຂອງພຣະວິນຍານຂອງເຮົາ: ມະນຸດບໍ່ໄດ້ຕໍ່ຕ້ານເຮົາຢ່າງເປີດເຜີຍບໍ? ເມື່ອລົມພາຍຸໄດ້ພັດຜ່ານໄປ, ມະນຸດທຸກຄົນກໍຄືກັບວ່າໄດ້ເກີດໃໝ່; ຄືກັບວ່າ ພາຍຫຼັງການເຮັດໃຫ້ບໍລິສຸດໂດຍຜ່ານຄວາມລຳບາກຍາກແຄ້ນ ພວກເຂົາແມ່ນໄດ້ຮັບແສງສະຫວ່າງ ແລະຊີວິດຄືນມາ. ຫຼັງຈາກໄດ້ທົນກັບການໂຈມຕີຂອງເຮົາ, ພວກເຈົ້າບໍ່ໄດ້ມີໂຊກລາບມາຮອດປັດຈຸບັນນີ້ບໍ? ແຕ່ເມື່ອມື້ນີ້ໄດ້ຜ່ານໄປ ແລະ ມື້ອື່ນມາເຖິງ, ພວກເຈົ້າຈະສາມາດຮັກສາຄວາມບໍລິສຸດ ຫຼັງຈາກຝົນຕົກຢ່າງໜັກໄດ້ບໍ? ພວກເຈົ້າຈະສາມາດຮັກສາການອຸທິດ ຫຼັງຈາກການເຮັດໃຫ້ພວກເຈົ້າບໍລິສຸດໄດ້ບໍ? ພວກເຈົ້າຈະສາມາດຮັກສາຄວາມເຊື່ອຟັງຂອງປັດຈຸບັນໄດ້ບໍ? ການອຸທິດຂອງພວກເຈົ້າຍັງຈະໝັ້ນຄົງ ແລະ ບໍ່ປ່ຽນແປງບໍ? ນີ້ແມ່ນການຮຽກຮ້ອງ ທີ່ຢູ່ເກີນຂີດຄວາມສາມາດຂອງມະນຸດທີ່ຈະບັນລຸໄດ້ບໍ? ເຮົາດຳລົງຊີວິດທຸກມື້ໃນທ່າມກາງມະນຸດ ແລະ ກະທຳການຮ່ວມກັນກັບມະນຸດໃນທ່າມກາງພວກເຂົາ ແຕ່ກໍບໍ່ມີໃຜເຄີຍສັງເກດເຫັນສິ່ງນີ້ເລີຍ. ຖ້າບໍ່ແມ່ນຍ້ອນການຊີ້ນຳຂອງພຣະວິນຍານຂອງເຮົາ, ແມ່ນໃຜຈາກເຜົ່າພັນມະນຸດທັງໝົດ ທີ່ຈະຍັງມີຊີວິດຢູ່ໃນຍຸກປັດຈຸບັນ? ເມື່ອເຮົາເວົ້າວ່າ ເຮົາມີຊີວິດ ແລະ ກະທຳການຮ່ວມກັນກັບມະນຸດ, ເຮົາໄດ້ເວົ້າເກີນຄວາມຈິງບໍ່? ໃນອະດີດ, ເຮົາໄດ້ເວົ້າວ່າ "ເຮົາໄດ້ສ້າງມະນຸດ ແລະ ຊີ້ນຳມະນຸດທັງໝົດ ແລະ ບັນຊາມະນຸດທັງໝົດ"; ນີ້ບໍ່ແມ່ນຄວາມຈິງບໍ? ເປັນໄປໄດ້ບໍ ທີ່ປະສົບການຂອງພວກເຈົ້າ ກ່ຽວກັບສິ່ງເຫຼົ່ານີ້ແມ່ນບໍ່ພຽງພໍ? ພຽງແຕ່ວະລີທີ່ວ່າ: "ຜູ້ເຮັດການບໍລິການ" ກໍຈະອະທິບາຍເຖິງຊີວິດທັງໝົດຂອງພວກເຈົ້າແລ້ວ. ຖ້າບໍ່ມີປະສົບການຕົວຈິງ, ມະນຸດຈະບໍ່ມີວັນມາຮູ້ຈັກເຮົາ. ພວກເຂົາຈະບໍ່ມີວັນສາມາດມາຮູ້ຈາກເຮົາຜ່ານພຣະທຳຂອງເຮົາ. ຢ່າງໃດກໍຕາມ, ໃນປັດຈຸບັນ ເຮົາໄດ້ມາຢູ່ທ່າມກາງພວກເຈົ້າດ້ວຍຕົວເອງ. ສິ່ງນີ້ຈະບໍ່ເປັນປະໂຫຍດຫຼາຍຕໍ່ຄວາມເຂົ້າໃຈຂອງພວກເຈົ້າບໍ? ການບັງເກີດເປັນມະນຸດຂອງເຮົາຍັງບໍ່ແມ່ນຄວາມລອດພົ້ນສຳລັບພວກເຈົ້າບໍ? ຖ້າເຮົາບໍ່ລົງມາສູ່ມະນຸດຊາດດ້ວຍຕົວຂອງເຮົາເອງ, ເຜົ່າພັນມະນຸດທັງໝົດກໍຈະເຕັມໄປດ້ວຍຄວາມຄິດ ທີ່ຖືກຊາຕານຄອບງຳແຕ່ດົນນານແລ້ວ ເພາະວ່າສິ່ງທີ່ເຈົ້າເຊື່ອແມ່ນເປັນພຽງພາບລັກຂອງຊາຕານ ແລະ ບໍ່ມີຫຍັງກ່ຽວຂ້ອງກັບພຣະເຈົ້າເອງເລີຍ. ນີ້ບໍ່ແມ່ນຄວາມລອດພົ້ນຂອງເຮົາບໍ?

ເມື່ອຊາຕານມາຢູ່ຕໍ່ໜ້າເຮົາ, ເຮົາບໍ່ໄດ້ຖອຍຫຼັງຈາກຄວາມໂຫດຮ້າຍປ່າເຖື່ອນຂອງມັນ ແລະເຮົາບໍ່ໄດ້ຕົກໃຈຈາກຄວາມສະຫຍົດສະຫຍອງຂອງມັນ: ເຮົາພຽງແຕ່ເມີນເສີຍກັບມັນ. ເມື່ອຊາຕານລໍ້ລວງເຮົາ, ເຮົາກໍເຫັນເຖິງເລ່ກົນຂອງມັນ ເຊິ່ງເຮັດໃຫ້ມັນຍ່າງຫຼົບໜ້າໄປດ້ວຍຄວາມລະອາຍໃຈ ແລະດ້ວຍຄວາມອັບອາຍຂາຍໜ້າ. ເມື່ອຊາຕານຕໍ່ສູ້ກັບເຮົາ ແລະ ພະຍາຍາມຍາດເອົາຜູ້ຄົນທີ່ເຮົາເລືອກ, ເຮົາກໍຕໍ່ສູ້ກັບມັນໃນເນື້ອໜັງຂອງເຮົາ; ແລະ ໃນເນື້ອໜັງຂອງເຮົາ ເຮົາກໍໄດ້ບຳລຸງຮັກສາ ແລະ ດູແລ

ປະຊາຊົນຂອງເຮົາ ເພື່ອວ່າ ພວກເຂົາຈະບໍ່ລົ້ມລົງ ຫຼື ຫຼົງທາງໄດ້ຢ່າງງ່າຍດາຍ ແລະ ເຮົາຈະນໍາພາພວກເຂົາໃນທຸກບາດກ້າວຂອງເສັ້ນທາງ. ເມື່ອຊາຕານຖອຍໄປດ້ວຍຄວາມພ່າຍແພ້ ເຮົາຈະໄດ້ຮັບສະຫງ່າລາສີຈາກປະຊາຊົນຂອງເຮົາ ແລະ ປະຊາຊົນຂອງເຮົາຈະເປັນພະຍານທີ່ງົດງາມ ແລະ ກຶກກ້ອງໃຫ້ແກ່ເຮົາ. ດັ່ງນັ້ນ, ເຮົາຈະເອົາສິ່ງທີ່ກີດຂວາງແຜນການຄຸ້ມຄອງຂອງເຮົາ ແລະ ຖິ້ມພວກມັນເປັນຄັ້ງສຸດທ້າຍລົງໃສ່ຂຸມທີ່ເລິກທີ່ສຸດ. ນີ້ແມ່ນແຜນການຂອງເຮົາ; ນີ້ແມ່ນພາລະກິດຂອງເຮົາ. ໃນຊີວິດຂອງພວກເຈົ້າ, ອາດຈະມີມື້ທີ່ເຈົ້າ ພົບກັບສະຖານະການດັ່ງກ່າວ: ເຈົ້າຈະເຕັມໃຈປ່ອຍໃຫ້ຕົວເອງຖືກຊາຕານຈັບກຸມໄປບໍ ຫຼື ຈະຍອມໃຫ້ເຮົາຮັບເອົາເຈົ້າ? ນີ້ແມ່ນຊາຕາກໍາຂອງເຈົ້າເອງ ແລະ ເຈົ້າຕ້ອງພິຈາລະນາມັນຢ່າງລະມັດລະວັງ.

ຊີວິດໃນອານາຈັກແມ່ນຊີວິດຂອງຜູ້ຄົນ ແລະ ພຣະເຈົ້າເອງ. ມະນຸດທຸກຄົນແມ່ນນອນຢູ່ພາຍໃຕ້ການເບິ່ງແຍງ ແລະ ການປົກປ້ອງຂອງເຮົາ ແລະ ທຸກຄົນແມ່ນເຮັດການຕໍ່ສູ້ຈົນຕາຍກັບມັງກອນແດງທີ່ຍິ່ງໃຫຍ່. ເພື່ອເອົາຊະນະການຕໍ່ສູ້ຄັ້ງສຸດທ້າຍນີ້, ເພື່ອກໍາຈັດມັງກອນແດງທີ່ຍິ່ງໃຫຍ່, ທຸກຄົນຄວນຖວາຍຊີວິດທັງໝົດຂອງພວກເຂົາໃຫ້ແກ່ເຮົາໃນອານາຈັກຂອງເຮົາ. "ອານາຈັກ" ທີ່ກ່າວຢູ່ບ່ອນນີ້ແມ່ນໝາຍເຖິງຊີວິດທີ່ດໍາລົງຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຈາກຄວາມເປັນພຣະເຈົ້າ ທີ່ເຮົາໄດ້ຊີ້ນໍາມະນຸດທຸກຄົນ, ຜູ້ທີ່ຍອມຮັບການຝຶກອົບຮົມຂອງເຮົາໂດຍກົງ ເພື່ອວ່າ ຊີວິດຂອງພວກເຂົາ ເຖິງແມ່ນວ່າ ຈະຍັງຢູ່ເທິງແຜ່ນດິນໂລກແຕ່ຄືກັບວ່າຢູ່ໃນສະຫວັນ ນັ້ນກໍຄືການເຂົ້າໃຈທີ່ແທ້ຈິງເຖິງຊີວິດໃນສະຫວັນຊັ້ນສາມ. ເຖິງແມ່ນວ່າ ເຮົາຈະຢູ່ໃນເນື້ອໜັງຂອງເຮົາ ແຕ່ເຮົາກໍບໍ່ໄດ້ທົນທຸກກັບຂໍ້ຈໍາກັດຂອງເນື້ອໜັງ. ຫຼາຍຄັ້ງທີ່ເຮົາໄດ້ມາຢູ່ໃນທ່າມກາງມະນຸດ ເພື່ອຟັງຄໍາອະທິຖານຂອງເຂົາ ແລະ ຫຼາຍຄັ້ງທີ່ເຮົາໄດ້ມາຍ່າງໃນທ່າມກາງມະນຸດ ແລະ ມີຄວາມສຸກກັບຄໍາສັນລະເສີນຂອງພວກເຂົາ; ເຖິງແມ່ນວ່າ ມະນຸດຈະບໍ່ເຄີຍຮູ້ເຖິງການມີຢູ່ຂອງເຮົາ ແຕ່ເຮົາກໍຍັງເຮັດພາລະກິດຂອງເຮົາດ້ວຍວິທີນີ້. ໃນບ່ອນພັກອາໄສຂອງເຮົາ ເຊິ່ງກໍຄືບ່ອນທີ່ເຮົາລີ້ຊ່ອນຢູ່. ຢ່າງໃດກໍຕາມ, ໃນບ່ອນພັກອາໄສຂອງເຮົາ, ເຮົາໄດ້ເອົາຊະນະສັດຕູທັງໝົດຂອງເຮົາ; ໃນບ່ອນພັກອາໄສຂອງເຮົາ, ເຮົາໄດ້ຮັບປະສົບການທີ່ແທ້ຈິງ ກ່ຽວກັບການດໍາລົງຊີວິດຢູ່ເທິງແຜ່ນດິນໂລກ; ໃນບ່ອນພັກອາໄສຂອງເຮົາ, ເຮົາສັງເກດເບິ່ງທຸກຄໍາເວົ້າ ແລະ ການກະທໍາຂອງມະນຸດ ແລະ ເຝົ້າເບິ່ງ ແລະ ນໍາພາເຜົ່າພັນມະນຸດທັງໝົດ. ຖ້າມະນຸດສາມາດຮູ້ສຶກເປັນຫ່ວງຕໍ່ເຈດຕະນາຂອງເຮົາ, ສາມາດເຮັດໃຫ້ເຮົາພໍໃຈ ແລະ ມອບຄວາມສຸກໃຫ້ແກ່ເຮົາ, ເຮົາກໍຈະໃຫ້ພອນແກ່ມະນຸດທຸກຄົນຢ່າງແນ່ນອນ. ນີ້ບໍ່ແມ່ນສິ່ງທີ່ເຮົາຕັ້ງໃຈສໍາລັບມະນຸດບໍ?

ໃນຂະນະທີ່ມະນຸດນອນໝົດສະຕິ, ມີແຕ່ສຽງຟ້າຮ້ອງຂອງເຮົາ ທີ່ປຸກໃຫ້ພວກເຂົາຕື່ນຈາກຄວາມຝັນຂອງພວກເຂົາ. ເມື່ອພວກເຂົາມືນຕາຂອງຕົວເອງ, ການເປັ່ງແສງທີ່ໜາວເຢັນເຫຼົ່ານີ້ເຮັດໃຫ້ຕາຂອງພວກເຂົາເຈັບປວດຈົນພວກເຂົາສັບສົນ ແລະ ບໍ່ຮູ້ຈັກວ່າ ພວກເຂົາແມ່ນມາແຕ່ໃສ ແລະ ບໍ່ຮູ້ວ່າພວກເຂົາກໍາລັງຈະໄປໃສ. ຄົນສ່ວນໃຫຍ່ແມ່ນຖືກໂຈມຕີດ້ວຍແສງທີ່ຄືກັບເລເຊີ ແລະ ລົ້ມລົງເປັນກອງພາຍໃຕ້ລົມພາຍຸ ເຊິ່ງຮ່າງກາຍຂອງພວກເຂົາກໍຖືກກະແສນໍ້າທີ່ໄຫຼແຮງພັດເອົາໄປ ໂດຍບໍ່ມີຮ່ອງຮອຍ. ໃນແສງສະຫວ່າງ, ໃນທີ່ສຸດຜູ້ທີ່ລອດຊີວິດກໍສາມາດເຫັນໃບໜ້າຂອງເຮົາຢ່າງຊັດເຈນ

ແລະ ຫຼັງຈາກນັ້ນ ພວກເຂົາຈຶ່ງມາຮູ້ຈັກບາງສິ່ງ ກ່ຽວກັບຮູບລັກສະນະພາຍນອກຂອງເຮົາ ຈົນພວກເຂົາບໍ່ກ້າເບິ່ງໜ້າເຮົາໂດຍກົງອີກຕໍ່ໄປ ໂດຍຢ້ານຢູ່ເລື້ອຍໆວ່າ ເຮົາຈະຂ້ຽນຕີ ແລະ ສາບແຊ່ງເນື້ອໜັງຂອງພວກເຂົາອີກຄັ້ງ. ຫຼາຍຄົນຮ້ອງອອກ ແລະ ຮ້ອງໄຫ້ຢ່າງຂົມຂື່ນ; ຫຼາຍຄົນຕົກຢູ່ໃນຄວາມໝົດຫວັງ; ຫຼາຍຄົນສ້າງແມ່ນ້ຳດ້ວຍເລືອດຂອງພວກເຂົາ; ຫຼາຍຄົນກາຍເປັນຊາກສົບ ທີ່ໄຫຼໄປໂດຍບໍ່ມີຈຸດໝາຍໄປທາງ; ຫຼາຍຄົນພົບເຫັນແສງສະຫວ່າງ, ຮູ້ສຶກເຈັບຫົວຢ່າງແຮງທັນທີ ແລະ ຮ້ອງໄຫ້ຫຼັ່ງນ້ຳຕາຍ້ອນຄວາມທຸກທີ່ພວກເຂົາໄດ້ຮັບເປັນເວລາຫຼາຍປີ. ຫຼາຍຄົນພາຍໃຕ້ແສງສະຫວ່າງໄດ້ສາລະພາບຄວາມບໍ່ສະອາດຂອງພວກເຂົາ ແລະ ໄດ້ຕົກລົງໃຈທີ່ຈະປະຕິຮູບຕົວເອງ. ຫຼາຍຄົນທີ່ຖືກເຮັດໃຫ້ຕາບອດ ໄດ້ສູນເສຍຄວາມສຸກໃນການມີຊີວິດ ແລະ ຜົນທີ່ຕາມມາກໍຄື ບໍ່ມີຈິດໃຈທີ່ຈະສັງເກດເຫັນແສງສະຫວ່າງ ແລະ ດ້ວຍເຫດນັ້ນ ກໍພາກັນສືບຕໍ່ນິ່ງເສີຍ ລໍຖ້າຈຸດຈົບຂອງພວກເຂົາ. ຫຼາຍຄົນໄດ້ຊັກໃບເຮືອແຫ່ງຊີວິດຂຶ້ນ ແລະ ພາຍໃຕ້ການຊີ້ນຳຂອງແສງສະຫວ່າງ ໄດ້ຄາດຫວັງຫາມື້ອື່ນຂອງພວກເຂົາດ້ວຍຄວາມຮ້ອນຮົນ... ໃນປັດຈຸບັນນີ້, ຜູ້ໃດໃນທ່າມກາງມະນຸດ ທີ່ບໍ່ມີຊີວິດໃນສະພາບດັ່ງກ່າວນີ້? ຜູ້ໃດທີ່ບໍ່ໄດ້ມີຊີວິດພາຍໃນແສງສະຫວ່າງຂອງເຮົາ? ເຖິງແມ່ນວ່າ ເຈົ້າຈະເຂັ້ມແຂງ ຫຼື ເຖິງແມ່ນວ່າ ເຈົ້າຈະອ່ອນແອ, ເຈົ້າຈະສາມາດຫຼີກເວັ້ນການມາຂອງແສງສະຫວ່າງຂອງເຮົາໄດ້ແນວໃດ?

ວັນທີ 10 ມີນາ 1992

# ບົດທີ 14

ຕະຫຼອດຍຸກຕ່າງໆ, ບໍ່ມີມະນຸດຄົນໃດໄດ້ເຂົ້າເຖິງອານາຈັກ ແລະ ສະນັ້ນ ຈຶ່ງບໍ່ມີໃຜໄດ້ຮັບພຣະຄຸນຈາກຍຸກແຫ່ງອານາຈັກ ແລະ ບໍ່ມີໃຜໄດ້ເຫັນກະສັດຂອງອານາຈັກ. ເຖິງຈະຢູ່ພາຍໃຕ້ແສງສະຫວ່າງຂອງພຣະວິນຍານຂອງເຮົາ, ຫຼາຍຄົນໄດ້ທຳນາຍເຖິງຄວາມງົດງາມຂອງອານາຈັກ, ພວກເຂົາຮູ້ພຽງແຕ່ພາຍນອກຂອງມັນ ແຕ່ບໍ່ຮູ້ສິ່ງທີ່ສຳຄັນທີ່ຢູ່ພາຍໃນ. ໃນປັດຈຸບັນ ໃນຂະນະທີ່ອານາຈັກໄດ້ເກີດຂຶ້ນຢູ່ເທິງແຜ່ນດິນໂລກຢ່າງເປັນທາງການ, ແຕ່ມະນຸດຊາດສ່ວນໃຫຍ່ກໍຍັງບໍ່ຮູ້ເຖິງສິ່ງທີ່ຕ້ອງເຮັດໃຫ້ສຳເລັດ ຫຼື ບໍ່ຮູ້ວ່າອານາຈັກແບບໃດທີ່ຜູ້ຄົນຈະຖືກນຳເຂົ້າໄປໃນທີ່ສຸດ ໃນຊ່ວງຍຸກແຫ່ງອານາຈັກ. ກ່ຽວກັບເລື່ອງດັ່ງກ່າວນີ້, ເຮົາຢ້ານວ່າ ມະນຸດທຸກຄົນຈະຕົກຢູ່ໃນສະພາບທີ່ສັບສົນ. ຍ້ອນວ່າມື້ທີ່ຈະສ້າງອານາຈັກໃຫ້ສຳເລັດຍັງບໍ່ມາເຖິງ, ມະນຸດທຸກຄົນເລີຍສັບສົນ ແລະ ບໍ່ສາມາດເຫັນມັນຢ່າງຊັດເຈນ. ພາລະກິດຂອງເຮົາໃນຄວາມເປັນພະເຈົ້າແມ່ນເລີ່ມຕົ້ນຢ່າງເປັນທາງການພ້ອມກັບຍຸກແຫ່ງອານາຈັກ ແລະ ດ້ວຍການເລີ່ມຕົ້ນຢ່າງເປັນທາງການຂອງຍຸກແຫ່ງອານາຈັກນີ້ ອຸປະນິໄສຂອງເຮົາຈຶ່ງເລີ່ມສະແດງໃຫ້ມະນຸດເຫັນຢ່າງຕໍ່ເນື່ອງ. ສະນັ້ນ, ໃນເວລານີ້ ສຽງແກສັກສິດຈະເລີ່ມດັງຂຶ້ນຢ່າງເປັນທາງການເພື່ອສົ່ງສຽງ ແລະ ປະກາດກັບທຸກຄົນ. ເມື່ອເຮົາເລີ່ມຮັບອຳນາດຂອງເຮົາ ແລະ ປົກຄອງເປັນກະສັດໃນອານາຈັກຢ່າງເປັນທາງການ, ເຮົາຈະເຮັດໃຫ້ປະຊາຊົນຂອງເຮົາທຸກຄົນສົມບູນຕາມການເວລາ. ເມື່ອທຸກຊາດທົ່ວໂລກໄດ້ຖືກທຳລາຍ, ເມື່ອນັ້ນ ອານາຈັກຂອງເຮົາຈະຖືກກໍ່ຕັ້ງຂຶ້ນ ແລະ ເປັນຮູບປະທຳ ແລະ ເມື່ອນັ້ນ ເຮົາຈະປ່ຽນແປງ ແລະ ຫັນມາຜະເຊີນກັບຈັກກະວານທັງໝົດ. ໃນເວລານັ້ນ, ທຸກຄົນຈະໄດ້ເຫັນໜ້າຕາທີ່ເຕັມໄປດ້ວຍລັດສະໝີພາບຂອງເຮົາ ແລະ ເຫັນລັກສະນະໃບໜ້າທີ່ແທ້ຈິງຂອງເຮົາ. ຕັ້ງແຕ່ການສ້າງໂລກ, ຈາກການທີ່ຜູ້ຄົນຖືກຊາຕານເຮັດໃຫ້ເສື່ອມຊາມຈົນເຖິງຂອບເຂດທີ່ວ່າພວກເຂົາໄດ້ເສື່ອມຊາມໃນປັດຈຸບັນ, ຈາກມຸມມອງຂອງພວກເຂົາ, ມັນເປັນຍ້ອນຄວາມເສື່ອມຊາມຂອງພວກເຂົາທີ່ ເຮົາໄດ້ລີ້ລັບຫຼາຍຂຶ້ນ ແລະ ຫຼາຍຂຶ້ນກວ່າເກົ່າ ແລະ ບໍ່ສາມາດຢັ່ງເຖິງຫຼາຍຂຶ້ນ. ມະນຸດບໍ່ເຄີຍເຫັນໃບໜ້າແທ້ຈິງຂອງເຮົາ ແລະ ບໍ່ເຄີຍພົວພັນກັບເຮົາໂດຍກົງ. ໃນຄຳກ່າວຂານ ແລະ ຕຳນານເທົ່ານັ້ນ ທີ່ມີສິ່ງທີ່ເອີ້ນວ່າ "ເຮົາ" ທີ່ຢູ່ໃນຈິນຕະນາການຂອງມະນຸດ. ສະນັ້ນ, ເຮົາແມ່ນເຫັນດີກັບຈິນຕະນາການຂອງມະນຸດ ເຊິ່ງກໍຄືແນວຄິດຕ່າງໆຂອງມະນຸດ ເພື່ອຈັດການກັບສິ່ງທີ່ເອີ້ນວ່າ "ເຮົາ" ໃນຈິດໃຈຂອງມະນຸດ, ເພື່ອວ່າເຮົາອາດຈະປ່ຽນສະພາບຂອງສິ່ງທີ່ເອີ້ນວ່າ "ເຮົາ" ທີ່ພວກເຂົາເຊື່ອມາເປັນເວລາຫຼາຍປີ. ນີ້ແມ່ນຫຼັກການໃນພາລະກິດຂອງເຮົາ. ບໍ່ມີມະນຸດຄົນໃດສາມາດຮູ້ຈັກໄດ້ຢ່າງຊັດເຈນ. ເຖິງແມ່ນວ່າ ມະນຸດຈະຂາບລົງຕໍ່ໜ້າເຮົາ ແລະ ມາຢູ່ຕໍ່ໜ້າເຮົາເພື່ອນະມັດສະການເຮົາ, ເຮົາກໍບໍ່ປິຕິຍິນດີກັບການກະທຳດັ່ງກ່າວຂອງພວກເຂົາ ເພາະວ່າໃນຫົວໃຈຂອງພວກເຂົານັ້ນ ຜູ້ຄົນບໍ່ຖືຮູບຂອງເຮົາ ແຕ່ຖືຮູບທີ່ບໍ່ແມ່ນຂອງເຮົາ. ສະນັ້ນ, ພວກເຂົາຂາດຄວາມເຂົ້າໃຈກ່ຽວກັບອຸປະນິໄສຂອງເຮົາ, ຜູ້ຄົນບໍ່ຮູ້ໜ້າຕາອັນແທ້ຈິງຂອງເຮົາເລີຍ. ສະນັ້ນ, ເມື່ອພວກເຂົາເຊື່ອວ່າ ພວກເຂົາໄດ້ຕໍ່ຕ້ານເຮົາ ຫຼື ລະເມີດກົດບັນຍັດແຫ່ງການບໍລິຫານ, ແຕ່ເຮົາກໍຍັງເຮັດຄືບໍ່ເຫັນ.

ສະນັ້ນ, ໃນຄວາມຊົງຈຳຂອງພວກເຂົາ, ເຮົາແມ່ນພຣະເຈົ້າທີ່ສະແດງຄວາມເມດຕາໃຫ້ກັບຜູ້ຄົນຫຼາຍກວ່າທີ່ຈະຂ້ຽນຕີພວກເຂົາ ຫຼື ເຮົາເປັນພຣະເຈົ້າທີ່ບໍ່ຈິງຈັງໃນສິ່ງທີ່ເຮົາເວົ້າ. ສິ່ງເຫຼົ່ານີ້ຄືຈິນຕະນາການທີ່ເກີດຈາກຄວາມຄິດຂອງມະນຸດ ແລະ ບໍ່ໄດ້ສອດຄ່ອງກັບຄວາມຈິງ.

ທຸກໆມື້ເຮົາຢືນສັງເກດເບິ່ງຈັກກະວານ ແລະ ເຮົາປົກປິດໂຕເອງໄວ້ຢ່າງງຽບໆໃນສະຖານທີ່ຢູ່ອາໄສຂອງເຮົາ, ປະສົບກັບຊີວິດຂອງມະນຸດ ແລະ ຮຽນຮູ້ທຸກການກະທຳຂອງຄວາມເປັນມະນຸດຢ່າງໃກ້ຊິດ. ບໍ່ມີໃຜເຄີຍຖວາຍໂຕເອງໃຫ້ກັບເຮົາຢ່າງແທ້ຈິງ; ບໍ່ມີໃຜເຄີຍສະແຫວງຫາຄວາມຈິງ. ບໍ່ມີໃຜເຄີຍເອົາໃຈໃສ່ເຮົາ ຫຼື ຕັດສິນໃຈຢ່າງເດັດດ່ຽວຕໍ່ໜ້າເຮົາ ແລະ ຫຼັງຈາກນັ້ນກໍຮັກສາໜ້າທີ່ຂອງພວກເຂົາ. ບໍ່ມີໃຜເຄີຍອະນຸຍາດໃຫ້ເຮົາອາໄສຢູ່ພາຍໃນເຂົາເຈົ້າ ຫຼື ມອບຄຸນຄ່າໃຫ້ເຮົາຄືກັນກັບທີ່ເຂົາຈະມອບໃຫ້ແກ່ຊີວິດຂອງໂຕເອງ. ບໍ່ມີໃຜເຄີຍເຫັນຄວາມເປັນພຣະເຈົ້າທັງໝົດຂອງເຮົາໃນຄວາມເປັນຈິງທີ່ແທ້ຈິງ; ບໍ່ມີໃຜເຄີຍເຕັມໃຈທີ່ຈະຕິດຕໍ່ກັບພຣະເຈົ້າທີ່ແທ້ຈິງ. ເມື່ອນໍ້າໄດ້ກືນກິນມະນຸດທັງໝົດ, ເຮົາຈະຊ່ວຍພວກເຂົາຈາກນໍ້າທີ່ສົກກະປົກ ແລະ ໃຫ້ໂອກາດພວກເຂົາໃຫ້ມີຊີວິດໃໝ່. ເມື່ອຜູ້ຄົນສູນເສຍຄວາມໝັ້ນໃຈໃນການດຳລົງຊີວິດ, ເຮົາຈະດຶງພວກເຂົາອອກຈາກຂອບເຫວແຫ່ງຄວາມຕາຍ ໂດຍມອບຄວາມກ້າຫານໃຫ້ແກ່ພວກເຂົາໃນການທີ່ຈະມີຊີວິດຢູ່ຕໍ່ໄປ ເພື່ອພວກເຂົາຈະສາມາດໃຊ້ເຮົາເປັນພື້ນຖານຂອງການມີຕົວຕົນຂອງພວກເຂົາ. ເມື່ອຜູ້ຄົນບໍ່ເຊື່ອຟັງເຮົາ, ເຮົາກໍຈະເຮັດໃຫ້ພວກເຂົາຮູ້ຈັກເຮົາຈາກພາຍໃນບໍ່ເຊື່ອຟັງຂອງພວກເຂົາ. ເນື່ອງຈາກທຳມະຊາດເກົ່າຂອງມະນຸດ ແລະ ເນື່ອງຈາກຄວາມເມດຕາຂອງເຮົາ, ແທນທີ່ຈະເຮັດໃຫ້ມະນຸດຕາຍ, ເຮົາອະນຸຍາດໃຫ້ພວກເຂົາກັບໃຈ ແລະ ເລີ່ມຕົ້ນຊີວິດໃໝ່ທີ່ສົດໃສ. ເມື່ອພວກເຂົາຕ້ອງປະສົບກັບຄວາມອຶດຢາກ, ເຮົາໄດ້ຊ່ວຍພວກເຂົາຈາກຄວາມຕາຍ ເຖິງວ່າພວກເຂົາຈະຍັງມີລົມຫາຍໃຈເຫຼືອຢູ່ພຽງຄັ້ງດຽວ ເພື່ອບໍ່ໃຫ້ພວກເຂົາຕົກເປັນເຫຍື່ອຂອງກົນລ່ວງຂອງຊາຕານ. ມີຈັກຄັ້ງແດ່ທີ່ຜູ້ຄົນເຫັນມືຂອງເຮົາ, ມີຈັກຄັ້ງທີ່ພວກເຂົາເຫັນສີໜ້າທີ່ເມດຕາຂອງເຮົາ ແລະ ໃບໜ້າທີ່ຍິ້ມແຍ້ມຂອງເຮົາ ແລະ ມີຈັກຄັ້ງທີ່ພວກເຂົາເຫັນຄວາມສະຫງ່າຜ່າເຜີຍ ແລະ ຄວາມໂມໂຫຂອງເຮົາ. ເຖິງມະນຸດບໍ່ເຄີຍຮູ້ຈັກເຮົາມາກ່ອນ, ເຮົາກໍບໍ່ສວຍໂອກາດໃຊ້ຄວາມອ່ອນແອຂອງພວກເຂົາ ເພື່ອສ້າງບັນຫາໂດຍຕັ້ງໃຈ. ການໄດ້ປະສົບກັບຄວາມລຳບາກຂອງມະນຸດໄດ້ເຮັດໃຫ້ເຮົາເຫັນອົກເຫັນໃຈໃນຄວາມອ່ອນແອຂອງມະນຸດ. ມັນພຽງແຕ່ເປັນການຕອບໂຕຕໍ່ຄວາມບໍ່ເຊື່ອຟັງຂອງມະນຸດ ແລະ ຄວາມອົກກະຕັນຍູຂອງພວກເຂົາ ທີ່ເຮັດໃຫ້ເຮົາຕັດສິນໃຈຂ້ຽນຕີພວກເຂົາໃນລະດັບທີ່ແຕກຕ່າງກັນໄປ.

ເຮົາປິດບັງໂຕເອງໃນເວລາທີ່ມະນຸດຫຍຸ້ງ ແລະ ເປີດເຜີຍໂຕເອງໃນເວລາຫວ່າງຂອງພວກເຂົາ. ຜູ້ຄົນຈິນຕະນາການວ່າເຮົາຮອບຮູ້ທຸກຢ່າງ; ພວກເຂົາຖືວ່າເຮົາເປັນພຣະເຈົ້າເອງ ທີ່ຍອມຕາມຄຳຮ້ອງຂໍທັງໝົດ. ສະນັ້ນ, ຄົນສ່ວນໃຫຍ່ຈຶ່ງມາຢູ່ຕໍ່ໜ້າເຮົາເພື່ອຮ້ອງຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ ໂດຍທີ່ບໍ່ໄດ້ມີຄວາມຕ້ອງການທີ່ຢາກຮູ້ຈັກເຮົາ. ເມື່ອຕົກຢູ່ໃນສະພາບຄວາມເຈັບໄຂ້, ຜູ້ຄົນຈະຮ້ອງຂໍຄວາມຊ່ວຍເຫຼືອຈາກເຮົາຢ່າງຮີບດ່ວນ. ເມື່ອຢູ່ໃນຄວາມລຳບາກຍາກແຄ້ນ, ພວກເຂົາຈະບອກເຮົາເຖິງຄວາມຫຍຸ້ງຍາກຂອງພວກເຂົາຢ່າງໝົດກຳລັງ ເພື່ອກຳຈັດຄວາມທຸກທໍລະມານຂອງພວກເຂົາເອງ.

ຢ່າງໃດກໍຕາມ, ບໍ່ມີມະນຸດແມ່ນແຕ່ຄົນໜຶ່ງ ທີ່ຈະສາມາດຮັກເຮົາໃນເວລາທີ່ພວກເຂົາຢູ່ໃນສະພາບທີ່ສຸກສະບາຍ; ບໍ່ມີແມ່ນແຕ່ຄົນໜຶ່ງໄດ້ຍື່ນມືຫາເຮົາໃນເວລາທີ່ພວກເຂົາມີຄວາມສະຫງົບສຸກ ແລະ ມີຄວາມສຸກ ເພື່ອໃຫ້ເຮົາໄດ້ເປັນສ່ວນໜຶ່ງໃນຄວາມສຸກຂອງພວກເຂົາ. ເມື່ອຄອບຄົວນ້ອຍໆຂອງພວກເຂົາມີຄວາມສຸກ ແລະ ສະບາຍດີ, ຜູ້ຄົນໄດ້ໂຍນເຮົາຖິ້ມ ຫຼື ປິດປະຕູໃສ່ເຮົາແຕ່ດົນນານແລ້ວ ໂດຍທີ່ຫ້າມບໍ່ໃຫ້ເຮົາເຂົ້າໄປທາງໃນ ເພື່ອວ່າພວກເຂົາຈະສາມາດເພີດເພີນກັບຄວາມສຸກກັບຄວາມສຸກທີ່ໄດ້ຈາກພອນຂອງຄອບຄົວພວກເຂົາ. ຄວາມຄິດຂອງມະນຸດແຄບຫຼາຍ; ມັນແຄບຫຼາຍຈົນບໍ່ສາມາດຍອມຮັບວ່າພຣະເຈົ້ານັ້ນເປັນທີ່ຮັກ, ມີຄວາມເມດຕາ ແລະ ສາມາດເຂົ້າຫາໄດ້ຄືດັ່ງເຮົາ. ເຮົາຖືກມະນຸດປະຕິເສດຫຼາຍຄັ້ງໃນເວລາທີ່ພວກເຂົາຫົວດ້ວຍຄວາມມ່ວນຊື່ນ; ມະນຸດໄດ້ມາອີງໃສ່ເຮົາຄືດັ່ງໄມ້ຄໍ້າ ໃນເວລາທີ່ພວກເຂົາສະດຸດລົ້ມຫຼາຍຄັ້ງ; ເຮົາຖືກບັງຄັບໃຫ້ເຮັດໜ້າທີ່ເປັນທ່ານໝໍໂດຍຜູ້ຄົນທີ່ທໍລະມານຈາກຄວາມເຈັບໄຂ້. ມະນຸດຈັ່ງແມ່ນໂຫດຮ້າຍຫຼາຍ! ພວກເຂົາບໍ່ມີເຫດຜົນ ແລະ ຊົ່ວຊ້າທີ່ສຸດ. ບໍ່ສາມາດຮັບຮູ້ແມ່ນແຕ່ຄວາມຮູ້ສຶກທີ່ມະນຸດຄວນມີ; ພວກເຂົາເກືອບປາສະຈາກຮ່ອງຮອຍຂອງຄວາມເປັນມະນຸດ. ໃຫ້ຄິດເຖິງອະດີດ ແລະ ປຽບທຽບມັນກັບປັດຈຸບັນ: ພາຍໃນໂຕພວກເຈົ້າແມ່ນມີການປ່ຽນແປງເກີດຂຶ້ນບໍ? ມີສິ່ງໃດແດ່ໃນອະດີດທີ່ຍັງຄົງຢູ່ໃນປັດຈຸບັນ? ຫຼື ສິ່ງທີ່ຢູ່ໃນອະດີດນັ້ນຍັງບໍ່ມີສິ່ງມາທົດແທນເທື່ອ?

ເຮົາໄດ້ຂ້າມຜ່ານເນີນພູສູງ ແລະ ຮ່ອມພູແມ່ນໍ້າ, ໄດ້ປະສົບກັບຈຸດຂຶ້ນ ແລະ ຈຸດລົງຂອງໂລກຂອງມະນຸດ. ເຮົາໄດ້ທ່ອງທ່ຽວໄປໃນທ່າມກາງພວກເຂົາ ແລະ ເຮົາໄດ້ອາໄສຢູ່ເປັນເວລາຫຼາຍປີທ່າມກາງພວກເຂົາ, ແຕ່ມັນກໍປະກົດວ່າ ນິໄສຂອງມະນຸດໄດ້ປ່ຽນແປງພຽງແຕ່ເລັກນ້ອຍ. ມັນເບິ່ງຄືວ່າ ທຳມະຊາດເກົ່າຂອງຜູ້ຄົນໄດ້ວາງຮາກ ແລະ ແຕກໜໍ່ໃນພວກເຂົາ. ພວກເຂົາບໍ່ມີວັນສາມາດປ່ຽນແປງທຳມະຊາດເກົ່າໆນັ້ນໄດ້; ພວກເຂົາພຽງແຕ່ປັບປຸງມັນຈາກພື້ນຖານດັ່ງເດີມຂອງມັນ. ດັ່ງທີ່ຜູ້ຄົນໄດ້ກ່າວໄວ້, ທາດແທ້ບໍ່ເຄີຍປ່ຽນແປງ ແຕ່ຮູບຮ່າງໄດ້ປ່ຽນແປງໄປຫຼາຍ. ມັນເບິ່ງຄືວ່າ ທຸກຄົນພະຍາຍາມຫຼອກລວງເຮົາ ແລະ ເຮັດໃຫ້ເຮົາສັບສົນ ເພື່ອເຂົາຈະລອດໂຕໄປ ແລະ ຮັບການຂອບໃຈຈາກເຮົາ. ເຮົາບໍ່ຊົມເຊີຍ ຫຼື ໃສ່ໃຈກົນລວງຂອງມະນຸດ. ແທນທີ່ຈະໂມໂຫຂຶ້ນ, ເຮົາໄດ້ນຳໃຊ້ທັດສະນະຄະຕິໃນການເບິ່ງ ແຕ່ບໍ່ໃຫ້ເຫັນ. ເຮົາວາງແຜນທີ່ຈະມອບອິດສະຫຼະພາບໃນລະດັບໜຶ່ງໃຫ້ກັບມະນຸດ ແລະ ຫຼັງຈາກນັ້ນ ກໍຈັດການກັບມະນຸດທັງໝົດພ້ອມກັນ. ເນື່ອງຈາກມະນຸດທຸກຄົນເປັນຄົນຊົ່ວທີ່ບໍ່ມີຄ່າທີ່ບໍ່ຮັກໂຕເອງ ແລະ ທີ່ບໍ່ຖະໜອມໂຕເອງ, ແລ້ວເປັນຫຍັງພວກເຂົາຈະຕ້ອງການໃຫ້ເຮົາສະແດງຄວາມເມດຕາ ແລະ ຄວາມຮັກອີກຄັ້ງ? ໂດຍບໍ່ມີຂໍ້ຍົກເວັ້ນ, ມະນຸດບໍ່ຮູ້ຈັກໂຕເອງ ແລະ ພວກເຂົາບໍ່ຮູ້ວ່າພວກເຂົາມີຄ່າສໍ່າໃດ. ພວກເຂົາຄວນນຳໂຕເອງໃສ່ໃນຊິງເພື່ອຊັ່ງນໍ້າໜັກ. ມະນຸດບໍ່ສົນໃຈເຮົາ ເຊິ່ງດ້ວຍເຫດນັ້ນ ເຮົາກໍບໍ່ຈິງຈັງກັບເຂົາເຊັ່ນດຽວກັນ. ພວກເຂົາບໍ່ສົນໃຈເຮົາ, ສະນັ້ນເຮົາກໍບໍ່ຈຳເປັນຕ້ອງໃຊ້ຄວາມພະຍາຍາມກັບພວກເຂົາຫຼາຍ. ສິ່ງນີ້ບໍ່ໄດ້ດີທີ່ສຸດສຳລັບທັງສອງໂລກບໍ? ສິ່ງນີ້ບໍ່ໄດ້ພັນລະນາເຖິງພວກເຈົ້າບໍ, ປະຊາຊົນຂອງເຮົາເອີຍ? ຜູ້ໃດໃນທ່າມກາງພວກເຈົ້າທີ່ເຮັດປະນິທານຕໍ່ໜ້າເຮົາ ແລ້ວບໍ່ໄດ້ໂຍນມັນຖິ້ມຫຼັງຈາກນັ້ນ? ຜູ້ໃດທີ່ເຄີຍເຮັດປະນິທານໄລຍະຍາວຕໍ່ໜ້າ

ເຮົາ ແທນທີ່ຈະຕັ້ງໃຈໃສ່ກັບສິ່ງຕ່າງໆເປັນປະຈຳ? ຕະຫຼອດເວລາ ມະນຸດເຮັດປະນິທານຕໍ່ໜ້າເຮົາໃນເວລາທີ່ສະບາຍ ແລະ ຫຼັງຈາກນັ້ນກໍປະຖິ້ມມັນໃນເວລາທີ່ຫຍຸ້ງຍາກລຳບາກ; ຫຼັງຈາກນັ້ນ ພວກເຂົາຈະນຳເອົາປະນິທານຂອງພວກເຂົາກັບມາ ແລະ ວາງມັນຢູ່ຕໍ່ໜ້າເຮົາ. ເຮົາບໍ່ເປັນຕາເຄົາລົບຂະໜາດນັ້ນບໍ ທີ່ຈະຍອມຮັບຂອງເສຍນີ້ທີ່ມະນຸດເກັບຂຶ້ນມາຈາກກອງຂີ້ເຫຍື່ອຢ່າງສະບາຍ? ມະນຸດຈຳນວນໜ້ອຍທີ່ຈະຮັກສາປະນິທານຂອງພວກເຂົາ, ມີພຽງຈຳນວນໜ້ອຍທີ່ຈະບໍລິສຸດ ແລະ ມີພຽງຈຳນວນໜ້ອຍທີ່ຈະຖວາຍສິ່ງທີ່ມີຄ່າທີ່ສຸດຂອງພວກເຂົາເພື່ອເສຍສະຫຼະໃຫ້ກັບເຮົາ. ພວກເຈົ້າທຸກຄົນບໍ່ໄດ້ເປັນຄືກັນບໍ? ໃນຖານະເປັນຄົນຂອງເຮົາໃນອານາຈັກ, ຖ້າພວກເຈົ້າບໍ່ສາມາດຮັກສາໜ້າທີ່ຂອງໂຕເອງໄດ້, ເຮົາກໍຈະກຽດຊັງ ແລະ ປະຕິເສດພວກເຈົ້າ!

ວັນທີ 12 ມີນາ 1992

# ບົດທີ 15

ມະນຸດລ້ວນແລ້ວແຕ່ເປັນສິ່ງມີຊີວິດທີ່ບໍ່ມີຄວາມຮູ້ກ່ຽວກັບຕົວເອງ ແລະ ພວກເຂົາບໍ່ສາມາດຮູ້ຈັກຕົວເອງໄດ້. ເຖິງຢ່າງໃດກໍຕາມ, ພວກເຂົາຮູ້ຈັກຄົນອື່ນໆຄືກັບຫຼັງມືຂອງພວກເຂົາ ຄືກັບວ່າທຸກສິ່ງທີ່ຄົນອື່ນໄດ້ເຮັດ ແລະ ໄດ້ເວົ້າໄດ້ຖືກ "ກວດສອບ" ໂດຍພວກເຂົາ, ຢູ່ຕໍ່ໜ້າພວກເຂົາ ແລະ ໄດ້ຮັບການອະນຸມັດຈາກພວກເຂົາກ່ອນທີ່ຈະເຮັດ. ດ້ວຍເຫດນັ້ນ, ມັນຈຶ່ງຄືກັບວ່າພວກເຂົາໄດ້ໃຊ້ມາດຕະການເຕັມກັບທຸກຄົນຕະຫຼອດເຖິງສະພາບທາງຈິດໃຈຂອງພວກເຂົາ. ມະນຸດລ້ວນແລ້ວແຕ່ເປັນແບບນີ້. ເຖິງວ່າໃນປັດຈຸບັນ ມະນຸດໄດ້ເຂົ້າສູ່ຍຸກແຫ່ງອານາຈັກ, ແຕ່ທຳມະຊາດຂອງເຂົາກໍຍັງບໍ່ໄດ້ປ່ຽນແປງ. ພວກເຂົາຍັງເຮັດແບບທີ່ເຮົາເຮັດເມື່ອຢູ່ຕໍ່ໜ້າເຮົາ, ແຕ່ເມື່ອລັບຫຼັງເຮົາ ພວກເຂົາກໍເລີ່ມລຸກຂຶ້ນເຮັດ "ທຸລະກິດ" ພິເສດຂອງເຂົາເອງ. ຢ່າງໃດກໍຕາມ, ຫຼັງຈາກນັ້ນ ເມື່ອພວກເຂົາມາຢູ່ຕໍ່ໜ້າເຮົາ, ພວກເຂົາກໍເປັນຄົນທີ່ແຕກຕ່າງຈາກເດີມ, ເຊິ່ງເບິ່ງຄືໃຈເຢັນ ແລະ ບໍ່ຢ້ານ, ໃບໜ້າສະຫງົບ ແລະ ໃຈເຕັ້ນປົກກະຕິ. ສິ່ງນີ້ບໍ່ແມ່ນສິ່ງທີ່ເຮັດໃຫ້ມະນຸດຊົ່ວຊ້າຫຼາຍແທ້ບໍ? ມີຈັກຄົນທີ່ມີສອງໜ້າທີ່ແຕກຕ່າງກັນຢ່າງສິ້ນເຊີງ, ໜ້າໜຶ່ງເມື່ອຢູ່ຕໍ່ໜ້າເຮົາ ແລະ ອີກໜ້າເມື່ອຢູ່ລັບຫຼັງເຮົາ? ມີພວກເຂົາຫຼາຍຄົນທີ່ເຮັດຄືກັບແກະນ້ອຍເກີດໃໝ່ເມື່ອຢູ່ຕໍ່ໜ້າເຮົາ ແຕ່ເມື່ອຢູ່ລັບຫຼັງເຮົາ ພວກເຂົາກໍກາຍເປັນເສືອທີ່ດຸຮ້າຍ ແລະ ຫຼັງຈາກນັ້ນກໍເຮັດຄືກັນກັບນົກນ້ອຍທີ່ບິນໄປມາໃນພູເຂົາຢ່າງລ່າເລີງ. ມີຈັກຄົນທີ່ສະແດງຈຸດປະສົງ ແລະ ປະນິທານເມື່ອຢູ່ຕໍ່ໜ້າເຮົາ? ມີຫຼາຍຄົນທີ່ມາຢູ່ຕໍ່ໜ້າເຮົາໂດຍສະແຫວງຫາພຣະທຳຂອງເຮົາດ້ວຍຄວາມກະຫາຍ ແລະ ຄວາມປາຖະໜາ, ແຕ່ເມື່ອຢູ່ລັບຫຼັງເຮົາ ພວກເຂົາກໍເມື່ອຍກັບພຣະທຳເຫຼົ່ານັ້ນ ແລະ ປະຖິ້ມ ຄືກັບວ່າພຣະວັດຈະນະຂອງເຮົາເປັນພາລະ. ມີຫຼາຍຄັ້ງ ເມື່ອເຫັນວ່າເຜົ່າພັນມະນຸດຖືກສັດຕູຂອງເຮົາເຮັດໃຫ້ເສື່ອມຊາມ, ເຮົາກໍປະຖິ້ມຄວາມຄາດຫວັງຂອງເຮົາໃນມະນຸດ. ມີຫຼາຍຄັ້ງ ເມື່ອເຫັນພວກເຂົາມາຢູ່ຕໍ່ໜ້າເຮົາດ້ວຍນໍ້າຕາເພື່ອຮຽກຮ້ອງການອະໄພໂທດ, ແຕ່ຍ້ອນຄວາມທີ່ເຂົາຂາດການເຄົາລົບຕົນເອງ ແລະ ຄວາມດື້ດຶງຂອງພວກເຂົາທີ່ແກ້ໄຂບໍ່ໄດ້, ເຮົາໄດ້ປິດຕາຂອງເຮົາຕໍ່ການກະທຳຂອງພວກເຂົາດ້ວຍຄວາມໂກດຮ້າຍ, ເຖິງແມ່ນວ່າຫົວໃຈຂອງພວກເຂົາແມ່ນຂອງແທ້ ແລະ ເຈດຕະນາຂອງພວກເຂົາແມ່ນຈິງໃຈກໍຕາມ. ມີຫຼາຍຄັ້ງ ເຮົາເຫັນຜູ້ຄົນມີຄວາມເຊື່ອໝັ້ນພໍທີ່ຈະຮ່ວມມືກັບເຮົາ ເຊິ່ງເມື່ອຢູ່ຕໍ່ໜ້າເຮົາ ຜູ້ຄົນກໍເບິ່ງຄືວ່າ ຢູ່ໃນອ້ອມກອດຂອງເຮົາ ແລະ ຊີມຄວາມອົບອຸ່ນຂອງມັນ. ມີຫຼາຍຄັ້ງທີ່ໄດ້ເຫັນຄວາມໄຮ້ດຽງສາ, ຄວາມມີຊີວິດຊີວາ ແລະ ຄວາມເປັນຕາຮັກຂອງຜູ້ຄົນທີ່ຖືກເລືອກຂອງເຮົາ, ແລ້ວເຮົາຈະບໍ່ມີຄວາມສຸກກັບສິ່ງເຫຼົ່າໄດ້ແນວໃດ? ມະນຸດບໍ່ຮູ້ວິທີການເພີດເພີນກັບພອນຂອງພວກເຂົາທີ່ຖືກກຳນົດລ່ວງໜ້າດ້ວຍມືຂອງເຮົາ, ເພາະພວກເຂົາບໍ່ຮູ້ຈັກວ່າ ແມ່ນຫຍັງໝາຍເຖິງ "ພອນ" ແລະ "ການທົນທຸກ" ກັນແທ້. ຍ້ອນເຫດຜົນນີ້, ມະນຸດຊາດຈຶ່ງຍັງຢູ່ໄກຫຼາຍໃນການສະແຫວງຫາເຮົາ. ຖ້າບໍ່ມີສິ່ງທີ່ເອີ້ນວ່າມື້ອື່ນ, ຜູ້ໃດໃນບັນດາພວກເຈົ້າທີ່ກຳລັງຢືນຢູ່ຕໍ່ໜ້າເຮົາ ທີ່ກຳລັງຢືນຢູ່ຕໍ່ໜ້າເຮົາທີ່ຂາວດັ່ງຫິມະບໍລິສຸດ ແລະ ບໍ່ມີມົນທິນດັ່ງແກ້ວຢົກ? ເປັນໄປໄດ້ບໍ ທີ່ ຄວາມຮັກຂອງພວກເຈົ້າທີ່ມີຕໍ່ເຮົາບໍ່ແມ່ນສິ່ງທີ່ສາມາດແລກປ່ຽນດ້ວຍອາຫານທີ່ແຊບ, ຊຸດເສື້ອຜ້າທີ່ຫຼູຫຼາ

ຫຼື ຕຳແໜ່ງທີ່ມີເງິນເດືອນສູງ? ມັນສາມາດຖືກແລກປ່ຽນກັບຄວາມຮັກທີ່ຄົນອື່ນມີໃຫ້ກັບເຈົ້າບໍ? ມັນແມ່ນບໍ ທີ່ການພະເຊີນກັບການທົດສອບຈະບໍ່ເຮັດໃຫ້ຜູ້ຄົນປະຖິ້ມຄວາມຮັກຂອງພວກເຂົາທີ່ມີຕໍ່ເຮົາ? ການທົນທຸກ ແລະ ຄວາມລຳບາກຍາກແຄ້ນຈະບໍ່ເຮັດໃຫ້ພວກເຂົາຕໍ່ວ່າສິ່ງທີ່ເຮົາໄດ້ຈັດແຈງໄວ້ບໍ? ບໍ່ມີໃຜທີ່ເຂົ້າໃຈດາບທີ່ແຫຼມຄົມທີ່ຢູ່ໃນປາກຂອງເຮົາ: ພວກເຂົາຮູ້ພຽງແຕ່ຄວາມໝາຍພາຍນອກໂດຍບໍ່ເຂົ້າໃຈຄວາມໝາຍພາຍໃນຂອງມັນຢ່າງແທ້ຈິງ. ຖ້າມະນຸດສາມາດເຫັນຄວາມຄົມຂອງດາບຂອງເຮົາຢ່າງແທ້ຈິງ, ພວກເຂົາຈະແລ່ນໜີສູ່ຮູຂອງພວກເຂົາຄືກັບໜູ. ຍ້ອນຄວາມມຶນຊາຂອງພວກເຂົາ, ມະນຸດບໍ່ເຂົ້າໃຈຫຍັງເລີຍກ່ຽວກັບຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາ ແລະ ສະນັ້ນ ພວກເຂົາຈຶ່ງບໍ່ຮູ້ເລີຍວ່າ ພຣະວັດຈະນະຂອງເຮົາເປັນຕາຢຳເກງພຽງໃດ ຫຼື ພວກມັນເປີດເຜີຍທຳມະຊາດຂອງພວກມະນຸດຫຼາຍສໍ່າໃດ ແລະ ຄວາມເສື່ອມຊາມຂອງພວກເຂົາຖືກພິພາກສາໂດຍພຣະທຳເຫຼົ່ານັ້ນຫຼາຍສໍ່າໃດ. ດ້ວຍເຫດຜົນນີ້, ເນື່ອງຈາກແນວຄວາມຄິດເຄິ່ງໆກາງໆທີ່ພວກເຂົາມີກ່ຽວກັບສິ່ງທີ່ເຮົາກ່າວ, ຄົນສ່ວນໃຫຍ່ຈຶ່ງມີທັດສະນະທີ່ບໍ່ເຕັມໃຈ.

ພາຍໃນອານາຈັກ, ບໍ່ແມ່ນແຕ່ພຣະຄຳເທົ່ານັ້ນທີ່ຖືກປະກາດອອກມາຈາກປາກຂອງເຮົາ ແຕ່ຕີນຂອງເຮົາກໍຍ່າງໄປທຸກຫົນແຫ່ງທົ່ວທຸກດິນແດນຢ່າງເປັນພິທີ. ໃນວິທີນີ້, ເຮົາໄດ້ເອົາຊະນະເໜືອທຸກຫົນແຫ່ງທີ່ບໍ່ສະອາດ ແລະ ສົກກະປົກ ເພື່ອວ່າບໍ່ແມ່ນພຽງແຕ່ສະຫວັນເທົ່ານັ້ນທີ່ໄດ້ຮັບການປ່ຽນແປງ, ແຕ່ແຜ່ນດິນໂລກກໍຍັງຢູ່ໃນຂະບວນການປ່ຽນແປງເຊັ່ນກັນ ແລະ ຫຼັງຈາກນັ້ນອີກກໍຈະຖືກສ້າງໃໝ່. ພາຍໃນຈັກກະວານ, ທຸກສິ່ງເຫຼື້ອມໃສຄືກັບສິ່ງໃໝ່ຢູ່ໃນຄວາມເປັ່ງປະກາຍແຫ່ງສະຫງ່າລາສີຂອງເຮົາ, ສະແດງເຖິງຄວາມອົບອຸ່ນໃຈທີ່ເຮັດໃຫ້ຮູ້ສຶກຫຼົງໄຫຼ ແລະ ເຮັດໃຫ້ຈິດໃຈຜູ້ຄົນເບີກບານ ຄືກັບວ່າ ໃນປັດຈຸບັນນີ້ ມັນຢູ່ໃນສະຫວັນທີ່ເໜືອສະຫວັນ ຕາມຄວາມຄິດໃນຈິນຕະນາການຂອງມະນຸດ, ບໍ່ຖືກບຽດບຽນໂດຍຊາຕານ ແລະ ເປັນອິດສະຫຼະຈາກການໂຈມຕີຂອງສັດຕູພາຍນອກ. ໃນຈຸດສູງສຸດຂອງຈັກກະວານ, ດວງດາວຈຳນວນຫຼວງຫຼາຍປະຈຳຕຳແໜ່ງທີ່ກຳນົດໄວ້ຂອງພວກມັນຕາມຄຳສັ່ງຂອງເຮົາ ໂດຍເຍືອງແສງໄປທົ່ວທ້ອງຟ້າໃນຍາມມືດມົວ. ບໍ່ມີແມ່ນແຕ່ດວງດຽວທີ່ກ້າມີຄວາມຄິດບໍ່ເຊື່ອຟັງ ແລະ ສະນັ້ນ ອີງຕາມທາດແທ້ແຫ່ງກົດບັນຍັດແຫ່ງການບໍລິຫານຂອງເຮົາ, ຈັກກະວານທັງປວງແມ່ນຖືກຄວບຄຸມຢ່າງເປັນລະບຽບ ແລະ ຢູ່ໃນສະພາບທີ່ສົມບູນ: ບໍ່ເຄີຍເກີດມີການລົບກວນໃດໆ ຫຼື ຈັກກະວານບໍ່ເຄີຍຖືກແບ່ງແຍກ. ເຮົາບິນໄປມາເໜືອດວງດາວ ແລະ ເມື່ອດວງຕາເວັນກະຈາຍແສງຂອງມັນອອກມາ, ເຮົາກໍປິດບັງຄວາມອົບອຸ່ນນັ້ນ ໂດຍສິ່ງກ້ອນຫິມະທີ່ໃຫຍ່ສໍ່າກັບຂົນຫ່ານລອຍລົງຈາກມືຂອງເຮົາ. ເມື່ອເຮົາປ່ຽນໃຈຂອງເຮົາ ຫິມະທັງໝົດນັ້ນກໍລະລາຍສູ່ແມ່ນໍ້າ ແລະ ໃນທັນໃດນັ້ນ, ລະດູໃບໄມ້ປົ່ງກໍເກີດຂຶ້ນຢູ່ທຸກຫົນແຫ່ງພາຍໃຕ້ທ້ອງຟ້າ ແລະ ສີຂຽວມໍລະກົດກໍປ່ຽນພູມມີປະເທດທັງໝົດຢູ່ເທິງແຜ່ນດິນໂລກ. ເຮົາຍ່າງໄປມາເທິງທ້ອງຟ້າ ແລະ ທັນໃດນັ້ນ ແຜ່ນດິນໂລກກໍຖືກປົກຄຸມໄປດ້ວຍຄວາມມືດມົວທີ່ມືດສະໜິດ ຍ້ອນຮູບຮ່າງຂອງເຮົາ: ໂດຍບໍ່ມີການແຈ້ງເຕືອນ, “ກາງຄືນ” ກໍມາເຖິງ ແລະ ທົ່ວໂລກກໍມືດມົວຈົນບໍ່ມີໃຜສາມາດເຫັນມືຢູ່ຕໍ່ໜ້າຕົນເອງ. ເມື່ອແສງສະຫວ່າງດັບສິ້ນລົງ, ມະນຸດກໍຖືເອົາໂອກາດນີ້ອາລະວາດທຳລາຍກັນແລະກັນ ໂດຍຍາດ ແລະ

ປຸ້ນສະດົມຈາກກັນເອງ. ປະຊາຊາດເທິງແຜ່ນດິນໂລກ ກໍຕົກຢູ່ໃນຄວາມແຕກແຍກກັນຢ່າງວຸ້ນວາຍ ແລະ ເຂົ້າສູ່ສະພາວະສັບສົນວຸ້ນວາຍ ຈົນເຖິງຈຸດທີ່ບໍ່ສາມາດໄຖ່ບາບພວກເຂົາທັງໝົດໄດ້. ມະນຸດດີ້ນ ຣົນຢູ່ໃນສະພາບແຫ່ງຄວາມທົນທຸກ, ຈົ່ມຄວນຄາງທ່າມກາງຄວາມເຈັບປວດ, ຮ້ອງໄຫ້ຢ່າງໜ້າ ເວດທະນາກັບຄວາມທຸກຂອງພວກເຂົາ, ປາຖະໜາໃຫ້ແສງສະຫວ່າງກັບມາໂລກມະນຸດອີກຄັ້ງ ແລະ ດ້ວຍເຫດນັ້ນ ກໍເຮັດໃຫ້ຍຸກແຫ່ງຄວາມມືດສິ້ນສຸດລົງ ແລະ ຟື້ນຟູຄວາມມີຊີວິດຊີວາທີ່ເຄີຍມີຢູ່. ຢ່າງໃດກໍຕາມ, ເຮົາໄດ້ປະຖິ້ມມະນຸດຊາດດ້ວຍສິ້ນແຂນເສື້ອຂອງເຮົາ, ບໍ່ສົນໃຈສານພວກເຂົາສຳລັບ ຄວາມຜິດພາດເທິງແຜ່ນດິນໂລກອີກຕໍ່ໄປ: ເຮົາກຽດຊັງ ແລະ ປະຕິເສດຜູ້ຄົນເທິງແຜ່ນດິນໂລກ ທັງປວງແຕ່ດົນມາແລ້ວ, ປິດຕາຂອງເຮົາຕໍ່ສະພາບການຕ່າງໆທີ່ຢູ່ເທິງແຜ່ນດິນໂລກ, ຫັນໜ້າຂອງເຮົາ ໜີຈາກການເຄື່ອນໄຫວ ແລະ ທ່າທາງທຸກຢ່າງຂອງມະນຸດ ແລະ ຢຸດພໍໃຈໃນຄວາມເປັນເດັກນ້ອຍ ແລະ ຄວາມໄຮ້ດຽງສາຂອງພວກເຂົາ. ເຮົາໄດ້ເລີ່ມຕົ້ນແຜນການອື່ນທີ່ຈະສ້າງໂລກໃໝ່, ເພື່ອວ່າໂລກ ໃໝ່ນີ້ຈະພົບກັບການເກີດໃໝ່ໄດ້ທັນເວລາ ແລະ ບໍ່ຈົມລົງໃຕ້ນໍ້າອີກຕໍ່ໄປ. ໃນທ່າມກາງມະນຸດ, ມີ ສະພາວະແປກປະຫຼາດຈຳນວນຫຼາຍທີ່ກຳລັງລໍຖ້າໃຫ້ເຮົາໃຫ້ພວກມັນຖືກຕ້ອງ, ມີຄວາມຜິດພາດ ຈຳນວນຫຼາຍທີ່ລໍຖ້າໃຫ້ເຮົາປ້ອງກັນເພື່ອບໍ່ໃຫ້ພວກມັນເກີດຂຶ້ນ, ມີຂີ້ຝຸ່ນຈຳນວນຫຼາຍທີ່ລໍຖ້າໃຫ້ເຮົາ ກວາດອອກ, ມີຄວາມເລິກລັບຈຳນວນຫຼາຍທີ່ຖ້າໃຫ້ເຮົາເປີດເຜີຍອອກ: ມະນຸດທັງປວງລໍຖ້າເຮົາ ແລະ ປາຖະໜາການມາເຖິງຂອງເຮົາ.

ເທິງແຜ່ນດິນໂລກ, ເຮົາຄືພຣະເຈົ້າທີ່ແທ້ຈິງທີ່ປະຕິບັດຢູ່ໃນຫົວໃຈຂອງມະນຸດ; ໃນສະຫວັນ, ເຮົາເປັນເຈົ້ານາຍຂອງສັບພະສິ່ງທັງປວງ. ເຮົາໄດ້ປີນພູເຂົາ ແລະ ລຸຍຂ້າມແມ່ນໍ້າ ແລະ ເຮົາຍັງລອຍເຂົ້າ ແລະ ອອກທ່າມກາງມະນຸດ. ແມ່ນໃຜກ້າຕໍ່ຕ້ານພຣະເຈົ້າທີ່ແທ້ຈິງຢ່າງເປີດເຜີຍແດ່? ແມ່ນໃຜກ້າໜີ ໄປຈາກອຳນາດຂອງອົງຊົງລິດທານຸພາບສູງສຸດ? ແມ່ນໃຜກ້າຢືນຢັນວ່າເຮົາຢູ່ໃນສະຫວັນໂດຍບໍ່ສົງໄສ ແມ່ນແຕ່ໜ້ອຍດຽວເລີຍ? ຍິ່ງໄປກວ່ານັ້ນ, ແມ່ນໃຜກ້າຢືນຢັນວ່າເຮົາໂຕ້ແຍ້ງບໍ່ໄດ້ຢູ່ແຜ່ນດິນໂລກ? ບໍ່ມີໃຜໃນມະນຸດຊາດທີ່ສາມາດກ່າວເຖິງສະຖານທີ່ທຸກແຫ່ງທີ່ເຮົາອາໄສເປັນລາຍລະອຽດໄດ້. ເປັນ ໄປໄດ້ບໍວ່າ ເມື່ອເຮົາຢູ່ໃນສະຫວັນ, ເຮົາກໍເປັນພຣະເຈົ້າທີ່ຢູ່ເໜືອທຳມະຊາດ ແລະ ເມື່ອເຮົາຢູ່ເທິງ ແຜ່ນດິນໂລກ, ເຮົາກໍເປັນພຣະເຈົ້າທີ່ແທ້ຈິງ? ແນ່ນອນຢູ່ແລ້ວວ່າ ການທີ່ເຮົາເປັນພຣະເຈົ້າທີ່ແທ້ຈິງ ຫຼື ບໍ່ນັ້ນ ແມ່ນບໍ່ສາມາດຖືກກຳນົດໂດຍການທີ່ເຮົາເປັນຜູ້ປົກຄອງຂອງສັບພະສິ່ງທັງປວງ ຫຼື ຄວາມ ຈິງທີ່ວ່າ ເຮົາປະສົບກັບຄວາມທົນທຸກຂອງໂລກມະນຸດ, ມັນສາມາດເປັນໄປໄດ້ບໍ? ຖ້າເປັນແບບນັ້ນ, ແລ້ວມະນຸດຈະບໍ່ໂງ່ຈ້າຈົນຄາດຫວັງນຳບໍ່ໄດ້ເລີຍບໍ? ເຮົາຢູ່ໃນສະຫວັນ, ເຮົາຍັງຢູ່ເທິງແຜ່ນດິນໂລກ; ເຮົາຢູ່ທ່າມກາງບັນດາສັບພະສິ່ງທັງປວງ ແລະ ຍັງຢູ່ທ່າມກາງຄົນຈຳນວນຫຼວງຫຼາຍ. ມະນຸດສາມາດ ສຳຜັດເຮົາໃນແຕ່ລະມື້; ຍິ່ງໄປກວ່ານັ້ນ ພວກເຂົາສາມາດເຫັນເຮົາໃນແຕ່ລະມື້. ສຳລັບມະນຸດແລ້ວ, ເຮົາເບິ່ງຄືກັບວ່າລີ້ລັບໃນບາງເທື່ອ ແລະ ບາງເທື່ອກໍສາມາດເຫັນໄດ້; ເບິ່ງຄືວ່າ ເຮົາມີຕົວຕົນແທ້ຈິງ ແຕ່ກໍເບິ່ງຄືວ່າ ເຮົາບໍ່ມີຕົວຕົນ. ໃນຕົວເຮົາແມ່ນມີຄວາມເລິກລັບທີ່ມະນຸດບໍ່ສາມາດຢັ່ງເຖິງໄດ້. ມັນຄື ກັບວ່າມະນຸດທຸກຄົນກຳລັງເບິ່ງເຮົາຢ່າງລະອຽດຜ່ານກ້ອງຈຸລະທັດເພື່ອຄົ້ນຫາຄວາມເລິກລັບທີ່ຫຼາຍ

ຂຶ້ນຕື່ມໃນຕົວເຮົາ ໂດຍຫວັງວ່າຈະກຳຈັດຄວາມຮູ້ສຶກອິດອັດທີ່ຢູ່ໃນຫົວໃຈຂອງພວກເຂົາ. ຢ່າງໃດກໍຕາມ, ເຖິງແມ່ນວ່າພວກເຂົາຈະໃຊ້ການສ່ອງລັງສີ, ມະນຸດກໍຈະສາມາດຄົ້ນພົບຄວາມລັບທີ່ເຮົາມີໄດ້ແນວໃດ?

ເມື່ອຄົນຂອງເຮົາຖືກຍົກຍ້ອງຮ່ວມກັບເຮົາຜ່ານການປະຕິບັດພາລະກິດຂອງເຮົາ, ໃນເວລານັ້ນບ່ອນຫຼົບຊ້ອນຂອງມັງກອນແດງທີ່ຍິ່ງໃຫຍ່ກໍຈະຖືກຂຸດພັ້, ຂີ້ຕົມ ແລະ ຂີ້ຝຸ່ນທັງໝົດຈະຖືກກວາດໃຫ້ສະອາດ ແລະ ນໍ້າທີ່ຖືກມົນລະພິດ ທີ່ສະສົມເປັນເວລາຫຼາຍປີໂດຍນັບບໍ່ຖ້ວນ ກໍຈະເຫືອດແຫ້ງດ້ວຍໄຟທີ່ເຜົາໄໝ້ຂອງເຮົາຈົນບໍ່ມີຢູ່ອີກຕໍ່ໄປ. ດັ່ງນັ້ນ ມັງກອນແດງທີ່ຍິ່ງໃຫຍ່ຈະດັບສະຫຼາຍໄປໃນທະເລສາບແຫ່ງແປວໄຟ ແລະ ມາດ. ພວກເຈົ້າເຕັມໃຈຢ່າງແທ້ຈິງທີ່ຈະຍັງຢູ່ພາຍໃຕ້ການດູແລດ້ວຍຄວາມຮັກຂອງເຮົາບໍ ເພື່ອຈະບໍ່ຖືກມັງກອນຍາດເອົາໄປ? ພວກເຈົ້າກຽດຊັງກົນອຸບາຍທີ່ຫຼອກລວງຂອງມັນແທ້ບໍ? ແມ່ນໃຜສາມາດເປັນພະຍານທີ່ຊື່ສັດໃຫ້ກັບເຮົາໄດ້? ເພື່ອຊື່ຂອງເຮົາ, ເພື່ອພຣະວິນຍານຂອງເຮົາ ແລະ ເພື່ອແຜນການຄຸ້ມຄອງທັງໝົດຂອງເຮົາ, ມີຜູ້ໃດສາມາດຖວາຍກຳລັງທັງໝົດຂອງພວກເຂົາບໍ? ໃນປັດຈຸບັນ ເມື່ອອານາຈັກຢູ່ໃນໂລກມະນຸດ, ນັ້ນກໍເປັນເວລາທີ່ເຮົາໄດ້ມາຢູ່ໃນທ່າມກາງມະນຸດດ້ວຍຕົວເອງ. ຖ້າບໍ່ເປັນແບບນີ້, ມີຜູ້ໃດສາມາດເຂົ້າສູ່ສະໜາມຮົບແທນເຮົາໂດຍບໍ່ມີຄວາມຢ້ານກົວໃດໆບໍ? ເພື່ອວ່າ ອານາຈັກຈະໄດ້ເປັນຮູບປະທຳ, ເພື່ອຫົວໃຈຂອງເຮົາຈະຖືກເຮັດໃຫ້ພໍໃຈ ແລະ ຍິ່ງໄປກວ່ານັ້ນແມ່ນເພື່ອມື້ຂອງເຮົາຈະມາເຖິງ, ເພື່ອວ່າ ເວລານັ້ນອາດມາເຖິງເມື່ອສັບພະສິ່ງທັງປວງຈະໄດ້ເກີດໃໝ່ ແລະ ອຸດົມສົມບູນ, ເພື່ອມະນຸດຈະຖືກຊ່ວຍໃຫ້ພົ້ນຈາກທະເລແຫ່ງການທົນທຸກ, ເພື່ອວ່າມື້ອື່ນຈະມາເຖິງ ແລະ ເພື່ອວ່າ ມື້ນັ້ນຈະມະຫັດສະຈັນ ແລະ ເກີດດອກອອກຜົນ ແລະ ຈະເລີນຮຸ່ງເຮືອງ ແລະ ຍິ່ງໄປກວ່ານັ້ນກໍເພື່ອວ່າ ຄວາມສຸກໃນອະນາຄົດຈະເກີດຂຶ້ນ, ມະນຸດທຸກຄົນກຳລັງດີ້ນຮົນດ້ວຍກຳລັງທັງໝົດຂອງພວກເຂົາ, ເສຍສະຫຼະຕົນເອງສຳລັບເຮົາໂດຍບໍ່ຈິ່ງຫຍັງໄວ້ເລີຍ. ນີ້ບໍ່ແມ່ນສັນຍານບົ່ງບອກບໍວ່າ ໄຊຊະນະເປັນຂອງເຮົາແລ້ວບໍ? ມັນບໍ່ແມ່ນເຄື່ອງໝາຍໃນການເຮັດແຜນການຂອງເຮົາໃຫ້ສຳເລັດບໍ?

ຍິ່ງຜູ້ຄົນດຳລົງຊີວິດໃນຍຸກສຸດທ້າຍຫຼາຍສໍ່າໃດ, ພວກເຂົາຍິ່ງຮູ້ສຶກເຖິງຄວາມວ່າງເປົ່າຂອງໂລກຫຼາຍສໍ່ານັ້ນ ແລະ ພວກເຂົາຍິ່ງມີຄວາມກ້າຫານທີ່ຈະດຳລົງຊີວິດໜ້ອຍລົງສໍ່ານັ້ນ. ຍ້ອນເຫດຜົນນີ້, ຜູ້ຄົນຈຳນວນຫຼວງຫຼາຍໄດ້ຕາຍຍ້ອນຄວາມຜິດຫວັງ, ຄົນອື່ນໆອີກຫຼວງຫຼາຍກໍຖືກເຮັດໃຫ້ຜິດຫວັງໃນການຄົ້ນຫາຂອງພວກເຂົາ ແລະ ຄົນອື່ນໆອີກຫຼວງຫຼາຍແມ່ນທົນທຸກກັບການຖືກຄວບຄຸມໂດຍມືຂອງຊາຕານ. ເຮົາໄດ້ຊ່ວຍຊີວິດຜູ້ຄົນຈຳນວນຫຼວງຫຼາຍ ແລະ ສະໜັບສະໜູນຫຼາຍຄົນ ແລະ ຫຼາຍຄັ້ງເມື່ອມະນຸດໄດ້ສູນເສຍແສງສະຫວ່າງ, ເຮົາກໍຍ້າຍພວກເຂົາກັບຄືນໄປສູ່ບ່ອນທີ່ມີແສງສະຫວ່າງ, ເພື່ອວ່າ ພວກເຂົາອາດຮູ້ຈັກເຮົາພາຍໃນແສງສະຫວ່າງ ແລະ ຮັບເອົາເຮົາຢ່າງມີຄວາມສຸກ. ເພາະການມາເຖິງຂອງແສງສະຫວ່າງຂອງເຮົາ, ການບູຊາຈຶ່ງເກີດຂຶ້ນໃນຫົວໃຈຂອງຜູ້ຄົນທີ່ອາໄສຢູ່ໃນອານາຈັກຂອງເຮົາ, ຍ້ອນເຮົາເປັນພຣະເຈົ້າເພື່ອໃຫ້ມະນຸດຮັກ, ເປັນພຣະເຈົ້າທີ່ມະນຸດຍຶດຕິດດ້ວຍຄວາມຮັກ ແລະ ມະນຸດແມ່ນເຕັມໄປດ້ວຍຄວາມປະທັບໃຈ ໄປຕໍ່ຮູບຮ່າງຂອງເຮົາ. ຢ່າງໃດກໍຕາມ ເມື່ອທຸກຢ່າງ

ຖືກກ່າວ ແລະ ເຮັດໃຫ້ສຳເລັດແລ້ວ ກໍບໍ່ມີຜູ້ໃດທີ່ເຂົ້າໃຈວ່າ ສິ່ງນີ້ແມ່ນການປະຕິບັດພາລະກິດຂອງພຣະວິນຍານ ຫຼື ເປັນໜ້າທີ່ຂອງເນື້ອໜັງ. ຜູ້ຄົນຈະຕ້ອງໄດ້ໃຊ້ເວລາທັງຊີວິດພຽງເພື່ອປະສົບກັບສິ່ງນີ້ສິ່ງດຽວຢ່າງລະອຽດ. ມະນຸດບໍ່ເຄີຍກຽດຊັງເຮົາໃນສ່ວນເລິກທີ່ສຸດຂອງຫົວໃຈຂອງພວກເຂົາ; ກົງກັນຂ້າມ ພວກເຂົາຍຶດຕິດກັບເຮົາໃນສ່ວນເລິກຂອງຈິດວິນຍານຂອງພວກເຂົາ. ສະຕິປັນຍາຂອງເຮົາເຮັດໃຫ້ເກີດການເຄົາລົບຂອງພວກເຂົາ, ສິ່ງມະຫັດສະຈັນທີ່ເຮົາກຳລັງປະຕິບັດເປັນອາຫານຕໍ່ສາຍຕາຂອງພວກເຂົາ, ພຣະທຳຂອງເຮົາເຮັດໃຫ້ຄວາມຄິດຂອງພວກເຂົາສັບສົນ ແຕ່ພວກເຂົາກໍຖະໜອມພຣະທຳເຫຼົ່ານັ້ນຢ່າງສຸດຊຶ້ງ. ຄວາມເປັນຈິງຂອງເຮົາເຮັດໃຫ້ມະນຸດເວົ້າບໍ່ອອກ, ຕົກສະເງີ້ ແລະ ມຶນງົງ ແຕ່ເຖິງຢ່າງໃດ ພວກເຂົາກໍເຕັມໃຈທີ່ຈະຍອມຮັບສິ່ງນີ້. ນີ້ບໍ່ແມ່ນການວັດແທກມະນຸດຕາມສິ່ງທີ່ເຂົາເປັນແທ້ບໍ?

ວັນທີ 13 ມີນາ 1992

# ບົດທີ 16

ມີຫຼາຍຢ່າງທີ່ເຮົາປາດຖະໜາຢາກເວົ້າກັບມະນຸດ, ມີຫຼາຍສິ່ງທີ່ເຮົາຕ້ອງບອກເຂົາ. ແຕ່ມະນຸດແມ່ນຍັງຂາດເຂີນຫຼາຍດ້ານຄວາມສາມາດໃນການຍອມຮັບ; ມະນຸດເຂົາບໍ່ສາມາດເຂົ້າໃຈພຣະທຳຂອງເຮົາທັງໝົດຕາມທີ່ເຮົາໄດ້ສະໜອງໃຫ້ ແລະ ພຽງແຕ່ເຂົ້າໃຈດ້ານດຽວເທົ່ານັ້ນ ໂດຍທີ່ຍັງຂາດຄວາມຮູ້ໃນດ້ານອື່ນໆ. ເຖິງຢ່າງນັ້ນກໍຕາມ ເຮົາກໍບໍ່ໄດ້ເຮັດໃຫ້ມະນຸດຕາຍ ຍ້ອນຄວາມບໍ່ມີພະລັງຂອງເຂົາ ຫຼື ເຮົາບໍ່ເສຍໃຈກັບຄວາມອ່ອນແອຂອງເຂົາ. ເຮົາພຽງແຕ່ປະຕິບັດພາລະກິດຂອງເຮົາ ແລະ ກ່າວຄືດັ່ງທີ່ເຄີຍກ່າວມາ ເຖິງແມ່ນວ່າ ມະນຸດຈະບໍ່ເຂົ້າໃຈຄວາມປະສົງຂອງເຮົາເລີຍ; ເມື່ອມື້ນັ້ນມາເຖິງ ຜູ້ຄົນຈະຮູ້ຈັກເຮົາໃນສ່ວນເລິກຂອງຫົວໃຈຂອງພວກເຂົາ ແລະ ຈະຈື່ຈຳເຮົາໃນຄວາມຄິດຂອງພວກເຂົາ. ເວລາທີ່ເຮົາຈາກແຜ່ນດິນໂລກໄປຈະເປັນເວລາອັນແນ່ນອນທີ່ເຮົາຂຶ້ນຄອງບັນລັງໃນຫົວໃຈຂອງມະນຸດ ເຊິ່ງໝາຍຄວາມວ່າ ມັນຈະເປັນເວລາທີ່ມະນຸດທຸກຄົນຮູ້ຈັກເຮົາ. ມັນຈະເປັນເວລາທີ່ບຸດຊາຍ ແລະ ປະຊາຊົນຂອງເຮົາປົກຄອງແຜ່ນດິນໂລກຄືກັນ. ຜູ້ທີ່ຮູ້ຈັກເຮົາຈະກາຍເປັນເສົາຫຼັກຂອງອານາຈັກຂອງເຮົາຢ່າງແນ່ນອນ ແລະ ບໍ່ມີໃຜ ນອກຈາກພວກເຂົາ ທີ່ຈະມີຄຸນສົມບັດປົກຄອງ ແລະ ກຳອຳນາດໃນອານາຈັກຂອງເຮົາ. ທຸກຄົນທີ່ຮູ້ຈັກເຮົາແມ່ນມີຄວາມເປັນຢູ່ຂອງເຮົາ ແລະ ສາມາດດຳລົງຢູ່ກັບເຮົາໃນທ່າມກາງມະນຸດທຸກຄົນ. ເຮົາບໍ່ສົນໃຈວ່າ ມະນຸດຈະຮູ້ຈັກເຮົາຮອດຂອບເຂດໃດ: ບໍ່ມີໃຜສາມາດຂັດຂວາງພາລະກິດຂອງເຮົາໃນທາງໃດທາງໜຶ່ງ ແລະ ມະນຸດບໍ່ສາມາດຖວາຍການຊ່ວຍເຫຼືອໃຫ້ເຮົາ ແລະ ບໍ່ສາມາດເຮັດຫຍັງໃຫ້ເຮົາ. ມະນຸດສາມາດປະຕິບັດຕາມການນຳພາຂອງເຮົາຈາກແສງສະຫວ່າງຂອງເຮົາເທົ່ານັ້ນ ແລະ ສະແຫວງຫາຄວາມປະສົງຂອງເຮົາໃນແສງສະຫວ່າງນີ້. ໃນປັດຈຸບັນນີ້ ຜູ້ຄົນໄດ້ມີຄຸນສົມບັດ ແລະ ເຊື່ອວ່າ ພວກເຂົາສາມາດຍ່າງວາງທ່າຢູ່ຕໍ່ໜ້າເຮົາ ແລະ ຫົວຂວັນ ແລະ ເວົ້າຕະຫຼົກກ່ຽວກັບເຮົາ ໂດຍບໍ່ມີການຫັກຫ້າມໃຈແມ່ນແຕ່ໜ້ອຍ ແລະ ກ່າວກັບເຮົາປານວ່າ ມີຄວາມເທົ່າທຽມກັນ. ເຖິງຢ່າງນັ້ນ ມະນຸດກໍຍັງບໍ່ຮູ້ຈັກເຮົາ, ເຖິງຢ່າງນັ້ນ ເຂົາກໍຍັງເຊື່ອວ່າພວກເຮົາມີທຳມະຊາດທີ່ຄ້າຍຄືກັນ, ພວກເຮົາມີເນື້ອໜັງ ແລະ ເລືອດ ແລະ ພວກເຮົາທັງສອງອາໄສຢູ່ໂລກມະນຸດ. ຄວາມເຄົາລົບບູຊາຂອງເຂົາ ທີ່ມີຕໍ່ເຮົາແມ່ນມີໜ້ອຍຫຼາຍ; ເຂົາເຄົາລົບບູຊາເຮົາໃນເວລາທີ່ເຂົາຢູ່ຕໍ່ໜ້າເຮົາ ແຕ່ກໍບໍ່ສາມາດຮັບໃຊ້ເຮົາຢູ່ຕໍ່ໜ້າພຣະວິນຍານ. ສຳລັບມະນຸດແລ້ວ ມັນຄືກັບວ່າພຣະວິນຍານບໍ່ມີຢູ່ຈິງເລີຍ. ດ້ວຍເຫດນັ້ນ ຈຶ່ງບໍ່ມີມະນຸດຜູ້ໃດທີ່ຮູ້ຈັກພຣະວິນຍານ; ໃນການບັງເກີດເປັນມະນຸດຂອງເຮົາ, ຜູ້ຄົນແມ່ນເຫັນຮ່າງກາຍທີ່ມີເນື້ອໜັງ ແລະ ເລືອດ ແລະ ບໍ່ເຫັນພຣະວິນຍານຂອງພຣະເຈົ້າ. ຄວາມປະສົງຂອງເຮົາຈະສາມາດຖືກເຮັດໃຫ້ສຳເລັດດ້ວຍວິທີດັ່ງກ່າວນີ້ໄດ້ແທ້ບໍ? ມະນຸດແມ່ນຜູ້ຊ່ຽວຊານໃນການຫຼອກລວງເຮົາ; ເບິ່ງຄືວ່າ ພວກເຂົາໄດ້ຮັບການເຝິກອົບຮົມຢ່າງເປັນພິເສດຈາກຊາຕານ ເພື່ອຫຼອກລວງເຮົາ. ຢ່າງໃດກໍຕາມ ເຮົາກໍບໍ່ມີບັນຫາຫຍັງ. ເຮົາຍັງຈະໃຊ້ສະຕິປັນຍາຂອງເຮົາ ເພື່ອປົກຄອງມວນມະນຸດທັງໝົດ ແລະ ເອົາຊະນະຜູ້ເຮັດໃຫ້ມະນຸດທຸກຄົນເສື່ອມຊາມ ເພື່ອວ່າ ອານາຈັກຂອງເຮົາຈະສາມາດຖືກສ້າງຂຶ້ນໃນແຜ່ນດິນໂລກ.

ໃນທ່າມກາງມະນຸດ ຍັງມີຄົນທີ່ພະຍາຍາມສືບຫາຂະໜາດຂອງດວງດາວ ຫຼື ຄວາມຍິ່ງໃຫຍ່ຂອງອາວະກາດ. ຢ່າງໃດກໍຕາມ ການຄົ້ນຄວ້າຂອງພວກເຂົາກໍບໍ່ເຄີຍມີຜົນປະໂຫຍດຫຍັງ ແລະ ສິ່ງທີ່ພວກເຂົາສາມາດເຮັດໄດ້ກໍຄືກົ້ມຫົວດ້ວຍຄວາມທໍ້ຖອຍໃຈ ແລະ ຍອມຮັບຄວາມລົ້ມເຫຼວຂອງພວກເຂົາ. ເມື່ອແນມເບິ່ງມະນຸດທຸກຄົນ ແລະ ສັງເກດເບິ່ງຂອບເຂດໃນຄວາມລົ້ມເຫຼວຂອງມະນຸດແລ້ວ ເຮົາບໍ່ເຫັນໃຜທີ່ຈະສາມາດເຮັດໃຫ້ເຮົາເຊື່ອໄດ້, ບໍ່ມີໃຜເຊື່ອຟັງເຮົາ ແລະ ຍອມເຮັດຕາມເຮົາຢ່າງເຕັມທີ່. ຄວາມທະເຍີທະຍານຂອງມະນຸດຈັ່ງແມ່ນໂຫດຮ້າຍຫຼາຍ! ເມື່ອມະຫາສະໝຸດທັງໝົດມືດມົວ ເຮົາກໍເລີ່ມຊີມລົດຊາດແຫ່ງຄວາມຂົມຂື່ນຂອງໂລກໃນທ່າມກາງມະນຸດ. ພຣະວິນຍານຂອງເຮົາເດີນທາງທົ່ວໂລກ ແລະ ເບິ່ງຈິດໃຈຂອງຜູ້ຄົນ ແລະ ເຊັ່ນດຽວກັນ ເຮົາກໍເອົາຊະນະມວນມະນຸດໂດຍການສະຖິດໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາ. ມະນຸດບໍ່ເຫັນເຮົາ ເນື່ອງຈາກເຂົາຕາບອດ; ມະນຸດບໍ່ຮູ້ຈັກເຮົາ ເນື່ອງຈາກເຂົາບໍ່ມີຄວາມຮູ້ສຶກ; ມະນຸດຕໍ່ຕ້ານເຮົາ ເນື່ອງຈາກເຂົາບໍ່ເຊື່ອຟັງ; ມະນຸດຂາບລົງຕໍ່ໜ້າເຮົາ ເນື່ອງຈາກເຂົາຖືກເຮົາເອົາຊະນະ; ມະນຸດຮັກເຮົາ ເນື່ອງຈາກວ່າ ໂດຍທໍາມະຊາດແລ້ວ ເຮົາຄູ່ຄວນໄດ້ຮັບຄວາມຮັກຂອງມະນຸດ; ມະນຸດດໍາລົງຢູ່ກັບເຮົາ ແລະ ສະແດງໃຫ້ເຮົາເຫັນຊັດເຈນ ເພາະວ່າ ອໍານາດຂອງເຮົາ ແລະ ສະຕິປັນຍາຂອງເຮົາເຮັດໃຫ້ພວກເຂົາສະແຫວງຫາໃຈຂອງເຮົາ. ເຮົາມີບ່ອນຢູ່ໃນໃຈຂອງມະນຸດ ແຕ່ເຮົາບໍ່ເຄີຍໄດ້ຮັບຄວາມຮັກ ທີ່ມີຕໍ່ເຮົາຈາກມະນຸດທີ່ດໍາລົງຢູ່ໃນຈິດວິນຍານຂອງເຂົາເລີຍ. ແນ່ນອນ ມີສິ່ງຕ່າງໆໃນຈິດໃຈຂອງມະນຸດທີ່ເຂົາຮັກເໜືອທຸກສິ່ງ ແຕ່ເຮົາບໍ່ແມ່ນໜຶ່ງໃນນັ້ນ ແລະ ດ້ວຍເຫດນັ້ນ ຄວາມຮັກຂອງມະນຸດຈຶ່ງຄືຟອງສະບູ: ເມື່ອລົມພັດ ມັນກໍຈະແຕກ ແລະ ຫາຍໄປ ໂດຍຈະບໍ່ເຫັນອີກເລີຍ. ເຮົາໝັ້ນຄົງສະເໝີ ແລະ ທັດສະນະຄະຕິຂອງເຮົາຕໍ່ມະນຸດກໍບໍ່ປ່ຽນແປງ. ມີບຸກຄົນໃດໃນບັນດາມວນມະນຸດທີ່ສາມາດເຮັດໄດ້ຄືເຮົາ? ໃນສາຍຕາຂອງມະນຸດ, ເຮົາແມ່ນຍາກທີ່ຈະສໍາຜັດໄດ້ ແລະ ແນມເບິ່ງບໍ່ເຫັນເໝືອນດັ່ງອາກາດ ແລະ ດ້ວຍເຫດຜົນນີ້ ຜູ້ຄົນສະແຫວງຫາທ້ອງຟ້າອັນກວ້າງໃຫຍ່ໄພສານເທົ່ານັ້ນ ຫຼື ໃນຄື້ນທະເລ ຫຼື ທະເລສາບທີ່ງຽບສະຫງົບ ຫຼື ໃນໜັງສື ແລະ ທິດສະດີທີ່ວ່າງເປົ່າ. ບໍ່ມີແມ່ນແຕ່ຄົນດຽວ ທີ່ຮູ້ຈັກແກ່ນແທ້ຂອງມະນຸດ ແລ້ວແຮງໄກທີ່ຈະມີຄົນສາມາດເວົ້າຢ່າງໃດກໍໄດ້ ກ່ຽວກັບຄວາມລຶກລັບພາຍໃນຕົວເຮົາ ແລະ ສະນັ້ນ ເຮົາຈຶ່ງບໍ່ຂໍໃຫ້ມະນຸດບັນລຸມາດຕະຖານທີ່ສູງສຸດ ທີ່ເຂົາຄິດວ່າ ເຮົາຕ້ອງການຈາກເຂົາ.

ໃນທ່າມກາງພຣະທໍາຂອງເຮົາ, ພູເຂົາຂວໍ້າ, ນໍ້າໄຫຼຍ້ອນກັບ, ມະນຸດອ່ອນນ້ອມ ແລະ ທະເລສາບເລີ່ມໄຫຼຢ່າງບໍ່ຢຸດເຊົາ. ເຖິງແມ່ນວ່າ ຄື້ນທະເລຈະພຸ່ງຂຶ້ນສູ່ທ້ອງຟ້າຢ່າງຮ້າຍກາດ ແຕ່ໃນທ່າມກາງພຣະທໍາຂອງເຮົາແລ້ວ ທະເລດັ່ງກ່າວຈະສະຫງົບຄືກັບໜ້ານໍ້າທະເລສາບ. ດ້ວຍການໂບກມືຂອງເຮົາພຽງເລັກນ້ອຍ ພາຍຸລົມທີ່ຮຸນແຮງກໍຈະຄ່ອຍໆຈາງຫາຍໄປ ແລະ ໜີຈາກເຮົາໄປ ແລະ ໂລກມະນຸດກໍຈະກັບຄືນສູ່ຄວາມສະຫງົບທັນທີ. ແຕ່ເມື່ອເຮົາປ່ອຍຄວາມໂກດຮ້າຍຂອງເຮົາອອກໄປ ພູເຂົາກໍຈະແຕກອອກເປັນຊິ້ນໆທັນທີ, ພື້ນດິນຈະເລີ່ມສັ່ນສະເທືອນທັນທີ, ນໍ້າຈະແຫ້ງທັນທີ ແລະ ມະນຸດຈະຖືກອ້ອມລ້ອມໄປດ້ວຍໄພພິບັດທັນທີ. ຍ້ອນຄວາມໂກດຮ້າຍຂອງເຮົາ, ເຮົາຈຶ່ງບໍ່ສົນໃຈກັບສຽງຮ້ອງ

ຂອງມະນຸດ, ບໍ່ໃຫ້ການຊ່ວຍເຫຼືອຕໍ່ການຮ້ອງໄຫ້ຂອງພວກເຂົາ ຍ້ອນວ່າຄວາມໃຈຮ້າຍຂອງເຮົາແມ່ນຮ້າຍແຮງຂຶ້ນ. ເມື່ອເຮົາຢູ່ທ່າມກາງສະຫວັນ ດວງດາວແມ່ນບໍ່ເຄີຍຕົກໃຈກັບການປາກົດຕົວຂອງເຮົາ. ກົງກັນຂ້າມ ຝູງດວງດາວແມ່ນໄດ້ເອົາໃຈໃສ່ປະຕິບັດພາລະກິດເພື່ອເຮົາ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງປະທານແສງສະຫວ່າງຫຼາຍກວ່າເກົ່າໃຫ້ພວກມັນ ແລະ ເຮັດໃຫ້ພວກມັນສ່ອງແສງແຈ້ງກວ່າເກົ່າ ເພື່ອວ່າ ພວກມັນຈະໄດ້ຮັບລັດສະໝີທີ່ຍິ່ງໃຫຍ່ເພື່ອເຮົາ. ສະຫວັນຍິ່ງແຈ້ງສະຫວ່າງຂຶ້ນເທົ່າໃດ ໂລກໃນເບື້ອງລຸ່ມກໍຍິ່ງມືດມົວລົງເທົ່ານັ້ນ; ຫຼາຍຄົນໄດ້ສະແດງຄວາມບໍ່ພໍໃຈວ່າ ການຈັດແຈງຂອງເຮົາແມ່ນບໍ່ເໝາະສົມ, ຫຼາຍຄົນໄດ້ໜີປະເຮົາ ເພື່ອໄປສ້າງອານາຈັກຂອງພວກເຂົາເອງ ເຊິ່ງພວກເຂົາໄດ້ນຳໃຊ້ເພື່ອທໍລະຍົດເຮົາ ແລະ ປີ້ນກັບສະພາບແຫ່ງຄວາມມືດ. ແຕ່ແມ່ນໃຜທີ່ສາມາດບັນລຸສິ່ງນີ້ໂດຍການຕັດສິນໃຈຂອງພວກເຂົາເອງ? ແມ່ນໃຜທີ່ປະສົບຜົນສຳເລັດໃນການຕັດສິນໃຈຢ່າງເດັດດ່ຽວຂອງພວກເຂົາ? ແມ່ນໃຜສາມາດປີ້ນກັບສິ່ງທີ່ເຮົາໄດ້ຈັດແຈງດ້ວຍມືຂອງເຮົາ? ເມື່ອລະດູໃບໄມ້ປົ່ງໄດ້ແຜ່ລາມໄປທົ່ວແຜ່ນດິນ ເຮົາຈະສົ່ງແສງສະຫວ່າງໄປຍັງທີ່ໂລກຢ່າງລັບໆ ແລະ ງຽບໆ ເພື່ອວ່າ ຢູ່ເທິງແຜ່ນດິນໂລກມະນຸດຈະຮູ້ສຶກເຖິງຄວາມສົດຊື່ນຂອງອາກາດໂດຍທັນທີ. ແຕ່ໃນເວລານັ້ນ ເຮົາຈະປິດບັງຕາຂອງມະນຸດ ເພື່ອວ່າ ເຂົາຈະເຫັນແຕ່ໝອກທີ່ປົກຄຸມພື້ນດິນ ແລະ ເຫັນທຸກຄົນ ແລະ ທຸກສິ່ງຢ່າງມືດມົວ. ສິ່ງທີ່ຜູ້ຄົນສາມາດເຮັດໄດ້ຄືຖອນຫາຍໃຈໃຫຍ່ ແລະ ຄິດວ່າວ່າ "ເປັນຫຍັງຈຶ່ງມີແສງສະຫວ່າງພຽງແຕ່ຄາວດຽວເທົ່ານັ້ນ? ເປັນຫຍັງພຣະເຈົ້າຈຶ່ງມອບແຕ່ໝອກ ແລະ ຄວາມມືດມົວໃຫ້ແກ່ມະນຸດເທົ່ານັ້ນ?" ໃນທ່າມກາງຄວາມສິ້ນຫວັງຂອງຜູ້ຄົນ, ໝອກຈະຫາຍໄປໃນທັນທີໃດ ແຕ່ເມື່ອພວກເຂົາແນມເຫັນແສງສະຫວ່າງພຽງເລັກນ້ອຍ ເຮົາກໍຈະປ່ອຍຝົນເທລົງມາໃສ່ພວກເຂົາຢ່າງໜັກ ແລະ ເຮັດໃຫ້ແກ້ວຫູຂອງພວກເຂົາດັບຍ້ອນພາຍຸຝົນໃນເວລາທີ່ພວກເຂົາຫຼັບນອນ. ຄອບງຳດ້ວຍຄວາມຕື່ນຕົກໃຈ ພວກເຂົາບໍ່ມີເວລາທີ່ຈະຫາບ່ອນລີ້ຝົນ ແລະ ຖືກຝົນເທລົງມາໃສ່ຢ່າງໜັກ. ທັນທີທັນໃດນັ້ນ ທຸກສິ່ງທຸກຢ່າງທີ່ຢູ່ກ້ອງສະຫວັນຈະຖືກລ້າງຈົນສະອາດໃນທ່າມກາງຄວາມໂກດຮ້າຍຂອງເຮົາ. ຜູ້ຄົນຈະບໍ່ສະແດງຄວາມບໍ່ພໍໃຈອີກຕໍ່ໄປ ກ່ຽວກັບຝົນທີ່ຕົກຢ່າງໜັກ ແລະ ໃນໃຈຂອງພວກເຂົາທຸກຄົນເກີດມີຄວາມເຄົາລົບບູຊາ. ຍ້ອນຝົນຕົກໜັກຢ່າງຕໍ່ເນື່ອງ ຜູ້ຄົນສ່ວນຫຼາຍຈຶ່ງໄດ້ຈົມຢູ່ໃນນໍ້າຝົນທີ່ຕົກຈາກທ້ອງຟ້າ ແລະ ໄດ້ກາຍເປັນຊາກສົບຈົມຢູ່ໃນນໍ້າ. ເຮົາແນມເບິ່ງແຜ່ນດິນໂລກທັງໝົດ ແລະ ເຫັນວ່າ ຫຼາຍຄົນໄດ້ຕື່ນຂຶ້ນແລ້ວ, ຫຼາຍຄົນໄດ້ສຳນຶກຜິດ, ຫຼາຍຄົນຊອກຫາແຫຼ່ງນໍ້າໂດຍຂີ່ເຮືອນ້ອຍໆ, ຫຼາຍຄົນຂາບລົງຕໍ່ໜ້າເຮົາ ເພື່ອຂໍໃຫ້ເຮົາອະໄພໃຫ້, ຫຼາຍຄົນໄດ້ເຫັນແສງສະຫວ່າງ, ຫຼາຍຄົນໄດ້ເຫັນໃບໜ້າຂອງເຮົາ, ຫຼາຍຄົນມີຄວາມກ້າທີ່ຈະດຳລົງຊີວິດ ແລະ ໂລກທັງໝົດແມ່ນໄດ້ປ່ຽນແປງແລ້ວ. ພາຍຫຼັງພາຍຸຝົນໄດ້ຕົກລົງຢ່າງໜັກ, ທຸກສິ່ງທຸກຢ່າງໄດ້ກັບຄືນໄປເປັນສິ່ງທີ່ເຄີຍເປັນ ແລະ ຈະບໍ່ມີຄວາມບໍ່ເຊື່ອຟັງອີກຕໍ່ໄປ. ອີກບໍ່ດົນ ແຜ່ນດິນທັງໝົດຈະເຕັມໄປດ້ວຍສຽງຫົວ, ທຸກບ່ອນເທິງແຜ່ນດິນໂລກຈະເຕັມໄປດ້ວຍບັນຍາກາດແຫ່ງການສັນລະເສີນ ແລະ ຈະບໍ່ມີບ່ອນໃດທີ່ຈະປາສະຈາກລັດສະໝີຂອງເຮົາ. ສະຕິປັນຍາຂອງເຮົາມີຢູ່ທຸກບ່ອນເທິງແຜ່ນດິນໂລກ ແລະ ທົ່ວຈັກກະວານທັງປວງ. ໃນທ່າມກາງທຸກສິ່ງ ແມ່ນມີໝາກຜົນຈາກສະຕິປັນຍາຂອງເຮົາ, ໃນທ່າມກາງມະນຸດທຸກຄົນ ແມ່ນເຕັມໄປດ້ວຍ

ພາລະກິດທີ່ດີທີ່ສຸດຈາກສະຕິປັນຍາຂອງເຮົາ; ໃນອານາຈັກຂອງເຮົາ ທຸກສິ່ງແມ່ນຄືກັນໝົດ ແລະ ທຸກຄົນແມ່ນອາໄສຢູ່ຢ່າງສັນຕິສຸກຢູ່ກ້ອງສະຫວັນຂອງເຮົາ ຄືກັບແກະທີ່ຢູ່ໃນທົ່ງຫຍ້າຂອງເຮົາ. ເຮົາເຄື່ອນໄຫວໄປມາຢູ່ເໜືອມະນຸດທຸກຄົນ ແລະ ກຳລັງເບິ່ງໄປທົ່ວທຸກບ່ອນ. ບໍ່ມີສິ່ງໃດທີ່ເບິ່ງຄືເກົ່າ ແລະ ບໍ່ມີໃຜທີ່ເປັນຄືເກົ່າດັ່ງທີ່ເຂົາເຄີຍເປັນ. ເຮົາພັກຢູ່ເທິງບັນລັງ, ເຮົາອີງຢູ່ເໜືອຈັກກະວານທັງປວງ ແລະ ເຮົາພໍໃຈຫຼາຍ ເນື່ອງຈາກວ່າ ທຸກສິ່ງໄດ້ຮັບຄວາມບໍລິສຸດຂອງພວກເຂົາກັບຄືນມາແລ້ວ ແລະ ເຮົາສາມາດອາໄສຢູ່ພາຍໃນພູເຂົາຊີໂອນອີກຄັ້ງຢ່າງສະຫງົບສຸກ ແລະ ຜູ້ຄົນເທິງແຜ່ນດິນໂລກກໍສາມາດດຳລົງຊີວິດຢູ່ຢ່າງສະຫງົບ ແລະ ດ້ວຍຄວາມເພິ່ງພໍໃຈພາຍໃຕ້ການນຳພາຂອງເຮົາ. ທຸກຄົນກຳລັງຈັດການກັບທຸກສິ່ງໃນກຳມືຂອງເຮົາ, ທຸກຄົນໄດ້ຮັບສະຕິປັນຍາ ແລະ ຮູບລັກສະນະດັ່ງເດີມຂອງພວກເຂົາກັບຄືນມາ; ໃນອານາຈັກຂອງເຮົາ ພວກເຂົາບໍ່ໄດ້ຖືກປົກຄຸມດ້ວຍຝຸ່ນອີກຕໍ່ໄປ ແລະ ມີແຕ່ຄວາມບໍລິສຸດຄືກັບແກ້ວຢົກ, ແຕ່ລະຄົນແມ່ນມີໃບໜ້າຄືກັບຜູ້ບໍລິສຸດທີ່ຢູ່ໃນໃຈຂອງມະນຸດ ຍ້ອນວ່າອານາຈັກຂອງເຮົາໄດ້ຖືກສ້າງຂຶ້ນແລ້ວໃນທ່າມກາງມະນຸດ.

ວັນທີ 14 ມີນາ 1992

# ບົດທີ 17

ພຣະວັດຈະນະຂອງເຮົາໄດ້ດັງກ້ອງຄືສຽງຟ້າຮ້ອງ ໂດຍປ່ອຍແສງໄປທຸກທິດທາງ ແລະ ທົ່ວແຜ່ນດິນໂລກທັງໝົດ ແລະ ໃນທ່າມກາງສຽງຟ້າຮ້ອງ ແລະ ຟ້າແມບເຫຼື້ອມນັ້ນ, ມະນຸດຖືກໂຈມຕີ. ບໍ່ມີມະນຸດຜູ້ໃດທີ່ເຄີຍເຂັ້ມແຂງໃນທ່າມກາງສຽງຟ້າຮ້ອງ ແລະ ຟ້າແມບເຫຼື້ອມ; ມະນຸດສ່ວນໃຫຍ່ແມ່ນຢ້ານກົວຫຼາຍຕໍ່ການມາຂອງແສງສະຫວ່າງຂອງເຮົາ ແລະ ບໍ່ຮູ້ວ່າຈະຕ້ອງເຮັດແນວໃດ. ເມື່ອແສງຣິບຣີ່ເລີ່ມປາກົດຂຶ້ນໃນທິດຕາເວັນອອກ, ຫຼາຍຄົນທີ່ຖືກດົນບັນດານດ້ວຍແສງຣິບຣີ່ນີ້ ກໍຖືກປຸກໃຫ້ຕື່ນຈາກພາບລວງຕາຂອງພວກເຂົາທັນທີ. ແຕ່ບໍ່ມີໃຜເຄີຍຮູ້ວ່າ ມື້ນັ້ນໄດ້ມາເຖິງແລ້ວ ທີ່ແສງສະຫວ່າງຂອງເຮົາລົງມາສູ່ແຜ່ນດິນໂລກ. ມະນຸດສ່ວນໃຫຍ່ແມ່ນຕົກຕະລຶງຈາກການມາເຖິງຂອງແສງສະຫວ່າງຢ່າງກະທັນຫັນ ແລະ ບາງຄົນທີ່ຈ້ອງເບິ່ງດ້ວຍຄວາມຕື່ນເຕັ້ນຢາກຮູ້ຢາກເຫັນ ກໍພາກັນສັງເກດເບິ່ງການເຄື່ອນໄຫວຂອງແສງສະຫວ່າງ ແລະ ທິດທາງຂອງການມາຂອງມັນ ໃນຂະນະທີ່ບາງຄົນຢືນຕຽມພ້ອມເມື່ອພວກເຂົາພະເຊີນກັບແສງສະຫວ່າງ ເພື່ອພວກເຂົາອາດຈະເຂົ້າໃຈຢ່າງຊັດເຈນຫຼາຍຂຶ້ນກ່ຽວກັບແຫຼ່ງທີ່ມາຂອງມັນ. ເຖິງຢ່າງນັ້ນກໍຕາມມີໃຜເຄີຍຄົ້ນພົບວ່າ ແສງສະຫວ່າງໃນມື້ນີ້ມີຄ່າສໍ່າໃດບໍ? ມີໃຜເຄີຍຕື່ນຂຶ້ນສູ່ຄວາມເປັນເອກະລັກຂອງແສງສະຫວ່າງໃນປັດຈຸບັນບໍ? ມະນຸດສ່ວນໃຫຍ່ໄດ້ແຕ່ສັບສົນ; ພວກເຂົາມີບາດແຜໃນຕາ ແລະ ຖືກໂຍນລົງໃສ່ຂີ້ຕົມໂດຍແສງສະຫວ່າງ. ພາຍໃຕ້ແສງທີ່ມືດມົວນີ້, ຜູ້ຄົນອາດເວົ້າວ່າ ຄວາມວຸ້ນວາຍປົກຄຸມໄປທົ່ວແຜ່ນດິນໂລກ ເຊິ່ງເປັນພາບທີ່ໜ້າສົມເພດທີ່ບໍ່ອາດທົນເບິ່ງໄດ້ ເມື່ອກວດສອບຢ່າງຖີ່ຖ້ວນແລ້ວ ກໍຈະໂຈມຕີຜູ້ຄົນດ້ວຍຄວາມໂສກເສົ້າຢ່າງແຮງ. ເມື່ອແສງສະຫວ່າງສ່ອງແສງກ້າຢ່າງແຮງ, ຜູ້ຄົນກໍຈະເຂົ້າໃຈຈາກສິ່ງນີ້ວ່າ ສະພາບຂອງແຜ່ນດິນໂລກຈະມີຄວາມສາມາດໜ້ອຍລົງ ທີ່ຈະເຮັດໃຫ້ມະນຸດມາຢືນຢູ່ຕໍ່ໜ້າເຮົາ. ມະນຸດນອນຢູ່ໃນລັດສະໝີຂອງແສງສະຫວ່າງ; ອີກເທື່ອໜຶ່ງ ມະນຸດທຸກຄົນນອນຢູ່ໃນຄວາມລອດພົ້ນຂອງແສງສະຫວ່າງ ແຕ່ຍັງຢູ່ໃນບາດແຜຂອງມັນ: ມີຜູ້ໃດບໍ ທີ່ບໍ່ໄດ້ຢູ່ໃນທ່າມກາງການໂຈມຕີອັນໂຫດຮ້າຍຂອງແສງສະຫວ່າງ? ມີຜູ້ໃດທີ່ສາມາດໜີຈາກການເຜົາໄໝ້ຂອງແສງສະຫວ່າງແດ່? ເຮົາໄດ້ຍ່າງໄປທົ່ວຈັກກະວານ ໂດຍຫວ່ານເມັດພືດແຫ່ງພຣະວິນຍານຂອງເຮົາດ້ວຍມືຂອງເຮົາ ເພື່ອວ່າມະນຸດທຸກຄົນ ທີ່ຢູ່ເທິງແຜ່ນດິນໂລກຈະຖືກເຮົາດົນບັນດານ ຍ້ອນສິ່ງນີ້. ຈາກຈຸດສູງສຸດຂອງສະຫວັນ, ເຮົາເບິ່ງລົງມາທົ່ວແຜ່ນດິນໂລກ ໂດຍແນມເບິ່ງປາກົດການທີ່ຜິດປົກກະຕິ ແລະ ແປກປະຫຼາດຂອງສິ່ງທີ່ມີຊີວິດເທິງແຜ່ນດິນໂລກ. ເບິ່ງຄືວ່າ ໜ້ານໍ້າມະຫາສະໝຸດກຳລັງໄດ້ຮັບການສະເທືອນຂອງແຜ່ນດິນໄຫວ: ນົກທະເລບິນໄປທາງນີ້ ແລະ ທາງນັ້ນ ໂດຍຊອກຫາປາເພື່ອທີ່ຈະກິນ. ໃນຂະນະດຽວກັນ, ພື້ນທະເລຍັງຢູ່ໃນສະພາບທີ່ສະຫງົບ ແລະ ສະພາບຂອງໜ້ານໍ້າທະເລກໍບໍ່ສາມາດປຸກມັນໃຫ້ຕື່ນຂຶ້ນມີສະຕິ ຍ້ອນພື້ນທະເລນັ້ນງຽບສະຫງົບຄືກັບສະຫວັນຊັ້ນສາມ: ໃນນີ້ ສິ່ງທີ່ມີຊີວິດ ທັງໃຫຍ່ ແລະ ນ້ອຍແມ່ນຢູ່ຮ່ວມກັນດ້ວຍຄວາມສັນຕິ ໂດຍບໍ່ເຄີຍມີ "ການຂັດແຍ້ງດ້ວຍປາກ ແລະ ລີ້ນ" ແມ່ນແຕ່ຄັ້ງດຽວ. ໃນທ່າມກາງປາກົດການທີ່ຜິດປົກກະຕິ ແລະ ແປກປະຫຼາດທີ່ນັບບໍ່ຖ້ວນນີ້, ມັນຍາກທີ່ສຸດສຳລັບມະນຸດ

ທີ່ຈະເຮັດໃຫ້ເຮົາພໍໃຈ. ຕຳແໜ່ງທີ່ເຮົາໄດ້ມອບໃຫ້ແກ່ມະນຸດແມ່ນສູງເກີນໄປ ແລະ ດ້ວຍເຫດນັ້ນ ຄວາມທະເຍີທະຍານຂອງເຂົາຈຶ່ງມີຫຼາຍ ແລະ ໃນສາຍຕາຂອງເຂົາຈຶ່ງມີແຕ່ການວັດແທກຂອງ ຄວາມບໍ່ເຊື່ອຟັງ ຕະຫຼອດ. ໃນການລົງວິໄນຂອງເຮົາທີ່ມີຕໍ່ມະນຸດ ແລະ ພາຍໃນການພິພາກສາຂອງເຮົາທີ່ມີຕໍ່ເຂົາ ແມ່ນມີຄວາມພະຍາຍາມຢ່າງເຈັບປວດຫຼາຍ ແລະ ຄວາມເມດຕາຢ່າງຫຼວງຫຼາຍ ແຕ່ຈາກສິ່ງເຫຼົ່ານີ້ ມະນຸດແມ່ນບໍ່ຮູ້ຫຍັງເລີຍ. ເຮົາບໍ່ເຄີຍປະຕິບັດຕໍ່ມະນຸດຢ່າງໂຫດຮ້າຍ; ເຮົາມີແຕ່ດັດສ້າງຢ່າງເໝາະສົມເທົ່ານັ້ນ ເມື່ອມະນຸດບໍ່ເຊື່ອຟັງ ແລະ ມີແຕ່ມອບຄວາມຊ່ວຍເຫຼືອທີ່ເໝາະສົມເທົ່ານັ້ນ ເມື່ອເຂົາອ່ອນແອ. ແຕ່ເມື່ອມະນຸດເຫີນຫ່າງຈາກເຮົາ ແລະ ຍິ່ງໄປກວ່ານັ້ນ ນຳໃຊ້ກົນອຸບາຍຂອງຊາຕານເພື່ອກະບົດຕໍ່ເຮົາ, ເຮົາກໍຈະກຳຈັດມະນຸດທັນທີ ໂດຍບໍ່ປ່ອຍໃຫ້ພວກເຂົາມີໂອກາດອີກຄັ້ງ ເພື່ອສະແດງທັກສະອັນຍິ່ງໃຫຍ່ຂອງພວກເຮົາຕໍ່ໜ້າເຮົາ ເພື່ອວ່າ ພວກເຂົາຈະບໍ່ສາມາດຍ່າງວາງທ່າຢ່າງໂອ້ອວດ ໂດຍຂົ່ມເຫັງຜູ້ອື່ນຢູ່ເທິງແຜ່ນດິນໂລກ.

ເຮົາແກວ່ງອຳນາດຂອງເຮົາໃສ່ແຜ່ນດິນໂລກ ແລະ ເປີດເຜີຍພາລະກິດຂອງເຮົາອອກທັງໝົດ. ທຸກສິ່ງທີ່ຢູ່ໃນພາລະກິດຂອງເຮົາ ແມ່ນສະທ້ອນໃຫ້ເຫັນຢູ່ເທິງແຜ່ນດິນໂລກ; ມະນຸດທີ່ຢູ່ເທິງແຜ່ນດິນໂລກບໍ່ເຄີຍເຂົ້າໃຈການເຄື່ອນໄຫວຂອງເຮົາໃນສະຫວັນ ແລະ ບໍ່ເຄີຍພິຈາລະນາຢ່າງລະອຽດເຖິງວົງໂຄຈອນ ແລະ ເສັ້ນໂຄຈອນຂອງພຣະວິນຍານຂອງເຮົາ. ມະນຸດສ່ວນໃຫຍ່ເຂົ້າໃຈພຽງແຕ່ເລື່ອງເລັກນ້ອຍທີ່ນອນຢູ່ນອກວິນຍານ, ໂດຍບໍ່ສາມາດເຂົ້າໃຈສະພາບຕົວຈິງຂອງວິນຍານ. ຄວາມຮຽກຮ້ອງທີ່ເຮົາມີຕໍ່ມວນມະນຸດແມ່ນບໍ່ໄດ້ອອກມາຈາກຕົວຕົນຂອງເຮົາທີ່ເລື່ອນລອຍຢູ່ໃນສະຫວັນ ຫຼື ມາຈາກຕົວຕົນທີ່ບໍ່ສາມາດປະເມີນໄດ້ຂອງເຮົາຢູ່ເທິງແຜ່ນດິນໂລກ; ເຮົາຮຽກຮ້ອງຢ່າງເໝາະສົມຕາມວຸດທິພາວະຂອງມະນຸດທີ່ຢູ່ເທິງແຜ່ນດິນໂລກ. ເຮົາບໍ່ເຄີຍເຮັດໃຫ້ຜູ້ໃດຢູ່ໃນຄວາມລຳບາກ ແລະ ເຮົາບໍ່ເຄີຍຂໍໃຫ້ຜູ້ໃດ "ບີບເລືອດຂອງເຂົາອອກມາ" ເພື່ອຄວາມສຸກຂອງເຮົາ. ຄວາມຮຽກຮ້ອງຂອງເຮົາພຽງສາມາດຈຳກັດສະເພາະສະພາບການດັ່ງກ່າວບໍ? ໃນບັນດາສັບພະສິ່ງທີ່ນັບບໍ່ຖ້ວນເທິງແຜ່ນດິນໂລກ, ສັບພະສິ່ງໃດທີ່ບໍ່ອ່ອນນ້ອມຕໍ່ອຸປະນິໄສຂອງພຣະທຳໃນປາກຂອງເຮົາ? ສັບພະສິ່ງໃດໃນບັນດາສັບພະສິ່ງເຫຼົ່ານີ້ ທີ່ເມື່ອມາຢູ່ຕໍ່ໜ້າເຮົາບໍ່ໄດ້ຖືກເຜົາຢ່າງສິ້ນເຊີງດ້ວຍພຣະທຳຂອງເຮົາ ແລະ ດ້ວຍແປວໄຟຂອງເຮົາ? ສັບພະສິ່ງໃດໃນບັນດາສັບພະສິ່ງເຫຼົ່ານີ້ ກ້າທີ່ຈະ "ຍ່າງວາງທ່າ" ດ້ວຍຄວາມພາກພູມໃຈເມື່ອຢູ່ຕໍ່ໜ້າເຮົາ? ສັບພະສິ່ງໃດໃນບັນດາສັບພະສິ່ງເຫຼົ່ານີ້ ທີ່ບໍ່ຍອມກົ້ມຂາບລົງເມື່ອຢູ່ຕໍ່ໜ້າເຮົາ? ເຮົາເປັນພຣະເຈົ້າທີ່ພຽງແຕ່ກຳນົດຄວາມມິດງຽບໃສ່ສິ່ງຊົງສ້າງບໍ? ໃນບັນດາສິ່ງຕ່າງໆທີ່ນັບບໍ່ຖ້ວນໃນການຊົງສ້າງ, ເຮົາໄດ້ເລືອກສິ່ງຊົງສ້າງເຫຼົ່ານັ້ນເພື່ອຕອບສະໜອງຄວາມປະສົງຂອງເຮົາ; ໃນບັນດາມະນຸດຊາດທັງຫຼາຍ, ເຮົາໄດ້ເລືອກຜູ້ທີ່ໃສ່ໃຈໃນຫົວໃຈເຮົາ. ເຮົາໄດ້ເລືອກດວງດາວ ທີ່ດີທີ່ສຸດໃນໝູ່ດາວທັງໝົດ ເພື່ອເພີ່ມແສງສະຫວ່າງໃສ່ອານາຈັກຂອງເຮົາ. ເຮົາໄປຍ່າງເທິງແຜ່ນດິນໂລກ, ກະຈາຍກິ່ນຫອມຫວນຂອງເຮົາໄປທຸກບ່ອນ ແລະ ປະຮູບຮ່າງຂອງເຮົາໄວ້ໃນທຸກແຫ່ງ. ແຕ່ລະບ່ອນແມ່ນມີສຽງຂອງເຮົາດັງສະນັ້ນ. ຜູ້ຄົນທຸກແຫ່ງຫົນຄອງຄອຍກັບທິວທັດທີ່ສວຍງາມຂອງອະດີດ ຍ້ອນວ່າມະນຸດທັງໝົດກຳລັງຈົດຈຳອະດີດ...

ມະນຸດທຸກຄົນປາດຖະໜາທີ່ຈະເຫັນໜ້າຂອງເຮົາ ແຕ່ເມື່ອເຮົາລົງໄປຢູ່ແຜ່ນດິນໂລກດ້ວຍຕົວເອງ ພວກເຂົາທຸກຄົນກໍລັງກຽດການມາຮອດຂອງເຮົາ ແລະ ພວກເຂົາຂັບໄລ່ການມາຮອດຂອງແສງສະຫວ່າງ ຄືກັບວ່າ ເຮົາແມ່ນສັດຕູຂອງມະນຸດຢູ່ສະຫວັນ. ມະນຸດທັກທາຍເຮົາດ້ວຍແສງປ້ອງກັນໃນສາຍຕາຂອງເຂົາ ແລະ ຍັງລະມັດລະວັງຢູ່ຕະຫຼອດເວລາ ໂດຍຢ້ານຢູ່ເລິກໆວ່າ ເຮົາອາດຈະມີແຜນການອື່ນສຳລັບເຂົາ. ຍ້ອນມະນຸດຖືວ່າ ເຮົາເປັນໝູ່ທີ່ບໍ່ຄຸ້ນເຄີຍ ພວກເຂົາຈຶ່ງຮູ້ສຶກຄືກັບວ່າ ເຮົາມີເຈດຕະນາຂ້າພວກເຂົາໂດຍບໍ່ເລືອກໜ້າ. ໃນສາຍຕາຂອງມະນຸດ ເຮົາແມ່ນຕົວປໍລະປັກທີ່ຮ້າຍກາດ. ຢ່າງໃດກໍຕາມ ຫຼັງຈາກໄດ້ຊີມຄວາມອົບອຸ່ນຂອງເຮົາໃນທ່າມກາງໄພພິບັດ ມະນຸດກໍຍັງບໍ່ຮູ້ເຖິງຄວາມຮັກຂອງເຮົາ ແລະ ຍັງຄິດທີ່ຈະຂັບໄລ່ເຮົາອອກຫ່າງ ແລະ ຕໍ່ຕ້ານເຮົາ. ເຮົາກອດມະນຸດໃນອ້ອມກອດດ້ວຍຄວາມອົບອຸ່ນ, ປ້ອນປາກເຂົາດ້ວຍຄວາມຫວານຊື່ນ ແລະ ປ້ອນອາຫານທີ່ຈຳເປັນລົງໃສ່ທ້ອງຂອງເຂົາ ໂດຍບໍ່ໄດ້ສວຍໂອກາດຈາກສະພາບການຂອງເຂົາ ເພື່ອຈັດການກັບເຂົາ. ແຕ່ຍ້ອນຄວາມຂີ້ຢ້ານຂອງມະນຸດ, ເມື່ອຄວາມໂກດຮ້າຍຂອງເຮົາເຮັດໃຫ້ພູເຂົາ ແລະ ແມ່ນ້ຳສັ່ນສະເທືອນ ເຮົາຈະບໍ່ປະທານຄວາມຊ່ວຍເຫຼືອເຫຼົ່ານີ້ໃນຮູບແບບຕ່າງໆໃຫ້ເຂົາອີກຕໍ່ໄປ. ໃນຂະນະນີ້ ເຮົາຈະເພີ່ມຄວາມໃຈຮ້າຍ ໂດຍປະຕິເສດບໍ່ໃຫ້ສິ່ງມີຊີວິດທັງໝົດໄດ້ມີໂອກາດສຳນຶກ ແລະ ໂດຍປະຖິ້ມຄວາມຫວັງຂອງເຮົາທັງໝົດທີ່ມີຕໍ່ມະນຸດ ເຮົາຈະມອບຜົນກຳສະໜອງໃຫ້ເຂົາຢ່າງສະສົມ. ໃນເວລານີ້ ຟ້າໄດ້ຮ້ອງ ແລະ ຟ້າແມບເຫຼື້ອມ ຄືກັບຄື້ນມະຫາສະໝຸດສັດສາດດ້ວຍຄວາມໂກດຮ້າຍ ແລະ ຄືກັບພູເຂົາສິບພັນໜ່ວຍທີ່ຕົກລົງມາ. ເນື່ອງຈາກຄວາມກະບົດຂອງເຂົາ ມະນຸດຈຶ່ງລົ້ມລົງໂດຍສຽງຟ້າຮ້ອງ ແລະ ຟ້າແມບເຫຼື້ອມ ແລະ ສັບພະສິ່ງອື່ນໆກໍຖືກກວາດລ້າງດ້ວຍການໂຈມຕີຂອງຟ້າຮ້ອງ ແລະ ຟ້າແມບເຫຼື້ອມ ແລະ ຈັກກະວານທັງໝົດຕົກສູ່ຄວາມວຸ້ນວາຍຢ່າງກະທັນຫັນ ແລະ ສິ່ງຊົງສ້າງບໍ່ສາມາດຟື້ນຟູລົມຫາຍໃຈທີ່ສຳຄັນແຫ່ງຊີວິດຄືນມາໄດ້. ມະນຸດນັບບໍ່ຖ້ວນບໍ່ສາມາດໜີພົ້ນຈາກສຽງແຜດຂອງຟ້າຮ້ອງ; ໃນທ່າມກາງແສງຟ້າແມບເຫຼື້ອມ ມະນຸດຖືກພັດລົ້ມລົງ ເທື່ອລະກຸ່ມສູ່ກະແສນ້ຳໄຫຼແຮງ, ຖືກກະແສນ້ຳທີ່ໄຫຼແຮງພັດຕົກຈາກພູເຂົາ. ທັນໃດນັ້ນ ໂລກຂອງ “ມະນຸດ” ກໍໄຫຼມາກອງກັນຢູ່ທີ່ “ປາຍທາງ” ຂອງມະນຸດ. ຊາກສົບໄຫຼໄປມາຢູ່ໜ້ານ້ຳມະຫາສະໝຸດ. ມະນຸດທຸກຄົນໄດ້ໄປໄກຈາກເຮົາຍ້ອນຄວາມໂກດຮ້າຍຂອງເຮົາ, ເພາະວ່າມະນຸດໄດ້ເຮັດບາບຕໍ່ແກ່ນແທ້ຂອງພຣະວິນຍານຂອງເຮົາ ແລະ ການກະບົດຂອງເຂົາກໍໄດ້ເຮັດຜິດຕໍ່ເຮົາ. ແຕ່ຢູ່ໃນບ່ອນທີ່ບໍ່ມີນ້ຳ, ມະນຸດຄົນອື່ນແມ່ນຍັງມີຄວາມສຸກໃນທ່າມກາງສຽງຫົວ ແລະ ສຽງເພງ ເຊິ່ງເປັນຄຳສັນຍາທີ່ເຮົາໄດ້ມອບໃຫ້ພວກເຂົາ.

ເມື່ອທຸກຄົນມິດງຽບ ເຮົາປ່ອຍແສງວິແວວອອກຕໍ່ສາຍຕາຂອງພວກເຂົາ. ດັ່ງນັ້ນ, ມະນຸດຈຶ່ງມີຈິດໃຈທີ່ແຈ່ມໃສ ແລະ ສາຍຕາທີ່ແຈ້ງສະຫວ່າງ ໂດຍບໍ່ເຕັມໃຈທີ່ຈະມິດງຽບອີກຕໍ່ໄປ; ສະນັ້ນ, ຄວາມຮູ້ສຶກທາງວິນຍານຈຶ່ງຖືກປຸກຂຶ້ນໃນຫົວໃຈຂອງພວກເຂົາທັນທີ. ເມື່ອສິ່ງນີ້ເກີດຂຶ້ນ, ມະນຸດທຸກຄົນກໍຖືກຟື້ນຄືນຊີບມາໃໝ່. ເມື່ອໄດ້ປະຖິ້ມຄວາມທຸກທີ່ບໍ່ອາດເວົ້າໄດ້ຂອງພວກເຂົາ ມະນຸດທຸກຄົນກໍມາຢູ່ຕໍ່ໜ້າເຮົາ ແລະ ໄດ້ຮັບໂອກາດອີກຄັ້ງໃນການຢູ່ລອດຜ່ານພຣະທຳທີ່ເຮົາໄດ້ປ່າວປະກາດ. ນີ້ກໍຍ້ອນວ່າ ມະນຸດທຸກຄົນປາດຖະໜາທີ່ຈະດຳລົງຊີວິດຢູ່ເທິງແຜ່ນດິນໂລກ. ແຕ່ແມ່ນໃຜໃນບັນດາ

ພວກເຂົາ ທີ່ເຄີຍມີເຈດຕະນາໃນການດຳລົງຊີວິດເພື່ອເຮົາບໍ່? ແມ່ນໃຜໃນທ່າມກາງພວກເຂົາ ທີ່ເຄີຍເປີດເຜີຍສິ່ງທີ່ງົດງາມໃນຕົວເຂົາເອງ ທີ່ເຂົາຖວາຍເພື່ອຄວາມສຸກຂອງເຮົາບໍ່? ແມ່ນໃຜໃນທ່າມກາງພວກເຂົາ ທີ່ເຄີຍກວດພົບອາຍກິ່ນທີ່ດຶງດູດໃຈຂອງເຮົາບໍ່? ມະນຸດທຸກຄົນແມ່ນສິ່ງທີ່ມົນຊາ ແລະ ບໍ່ບໍລິສຸດ: ທາງດ້ານພາຍນອກ, ພວກເຂົາແມ່ນເບິ່ງຄືເຫຼື້ອມຕາ ແຕ່ທາດແທ້ຂອງພວກເຂົາແມ່ນບໍ່ມີຄວາມຮັກຕໍ່ເຮົາຢ່າງຈິງໃຈ, ຍ້ອນໃນສ່ວນເລິກຂອງຫົວໃຈຂອງມະນຸດ ແມ່ນບໍ່ເຄີຍມີອົງປະກອບຂອງເຮົາ. ມະນຸດຂາດເຂີນຫຼາຍເກີນໄປ: ການປຽບທຽບເຂົາກັບເຮົາເບິ່ງຄືກັບວ່າ ເປີດເຜີຍອ່າວອັນກວາງໃຫຍ່ລະຫວ່າງສະຫວັນ ແລະ ແຜ່ນດິນໂລກ. ເຖິງຢ່າງນັ້ນກໍຕາມ ເຮົາກໍບໍ່ໂຈມຕີຈຸດອ່ອນ ແລະ ຈຸດບອບບາງຂອງມະນຸດ ແລະ ເຮົາບໍ່ຫົວຂວັນເຍາະເຍີ້ຍເຂົາ ຍ້ອນຂໍ້ບົກຜ່ອງຂອງເຂົາ. ມືຂອງເຮົາແມ່ນໄດ້ເຮັດພາລະກິດຢູ່ແຜ່ນດິນໂລກເປັນເວລາຫຼາຍພັນປີ ແລະ ຕະຫຼອດເວລາ ຕາຂອງເຮົາໄດ້ເຝົ້າເບິ່ງມະນຸດທຸກຄົນ. ແຕ່ເຮົາບໍ່ເຄີຍເອົາຊີວິດມະນຸດແມ່ນແຕ່ຊີວິດດຽວຢ່າງສະບາຍ ເພື່ອເອົາມາລໍ້ຫຼິ້ນຄືກັບວ່າ ມັນເປັນຂອງຫຼິ້ນ. ເຮົາສັງເກດເບິ່ງຄວາມເຈັບປວດທີ່ມະນຸດໄດ້ຮັບ ແລະ ເຂົ້າໃຈເຖິງລາຄາທີ່ເຂົາໄດ້ຈ່າຍ. ເມື່ອເວລາທີ່ເຂົາຢືນຢູ່ຕໍ່ໜ້າເຮົາ, ເຮົາບໍ່ປາດຖະໜາທີ່ຈະລັກລອບຈັບເອົາມະນຸດ ເພື່ອຂ້ຽນຕີເຂົາ ແລະ ເຮົາບໍ່ຕ້ອງການທີ່ຈະປະທານສິ່ງທີ່ບໍ່ປາດຖະໜາໃຫ້ກັບເຂົາ. ກົງກັນຂ້າມ, ຕະຫຼອດເວລາ ເຮົາໄດ້ສະໜອງໃຫ້ມະນຸດ ແລະ ມອບໃຫ້ກັບເຂົາເທົ່ານັ້ນ. ສະນັ້ນ, ມະນຸດທຸກຄົນແມ່ນມີຄວາມສຸກໃນພຣະຄຸນຂອງເຮົາ ເຊິ່ງມັນແມ່ນລາງວັນທັງໝົດທີ່ມາຈາກມືຂອງເຮົາ. ຍ້ອນເຮົາຢູ່ເທິງແຜ່ນດິນໂລກ ມະນຸດຈຶ່ງບໍ່ເຄີຍທົນທຸກກັບຄວາມອຶດຢາກ. ກົງກັນຂ້າມ, ເຮົາເຮັດໃຫ້ມະນຸດໄດ້ຮັບສິ່ງຕ່າງໆໃນມືຂອງເຮົາທີ່ເຂົາອາດມີຄວາມສຸກ ແລະ ເຮົາເຮັດໃຫ້ມະນຸດດຳລົງຊີວິດພາຍໃນພອນຂອງເຮົາ. ມະນຸດທຸກຄົນບໍ່ໄດ້ດຳລົງຊີວິດຢູ່ພາຍໃຕ້ການຂ້ຽນຕີຂອງເຮົາບໍ? ດັ່ງທີ່ຄວາມອຸດົມສົມບູນໃນສ່ວນເລິກຂອງພູເຂົາ ແລະ ຄວາມສົມບູນໃນສິ່ງຕ່າງໆທີ່ໜ້າຊື່ນຊົມຢູ່ໃນນໍ້າ, ຜູ້ຄົນທີ່ດຳລົງຊີວິດພາຍໃນພຣະທຳຂອງເຮົາໃນປັດຈຸບັນ ບໍ່ໄດ້ມີອາຫານເພື່ອໃຫ້ຊື່ນຊົມ ແລະ ຊີມລົດຊາດບໍ? ເຮົາຢູ່ເທິງແຜ່ນດິນໂລກ ແລະ ມະນຸດມີຄວາມສຸກກັບພອນຂອງເຮົາຢູ່ເທິງແຜ່ນດິນໂລກ. ເມື່ອເຮົາຈາກແຜ່ນດິນໂລກໄປ ເຊິ່ງຈະເປັນເວລາທີ່ພາລະກິດຂອງເຮົາສຳເລັດລົງເຊັ່ນກັນ, ມະນຸດແມ່ນຈະບໍ່ໄດ້ຮັບຄວາມພໍໃຈຈາກເຮົາອີກຕໍ່ໄປ ຍ້ອນຄວາມອ່ອນແອຂອງພວກເຂົາ.

ວັນທີ 16 ມີນາ 1992

# ບົດທີ 18

ໃນແສງແມບຂອງຟ້າແມບເຫຼື້ອມ, ສັດທຸກໂຕແມ່ນຖືກເປີດເຜີຍໃນຮູບຮ່າງທີ່ແທ້ຈິງຂອງມັນ. ເຊັ່ນກັນ ດ້ວຍການເຍືອງທາງຈາກແສງສະຫວ່າງຂອງເຮົາ ມະນຸດກໍໄດ້ຮັບຄວາມບໍລິສຸດທີ່ເຂົາເຄີຍມີຄັ້ງໜຶ່ງກັບຄືນມາ. ໂອ, ໂລກທີ່ເສື່ອມຊາມຂອງອະດີດ! ໃນທີ່ສຸດ ມັນກໍຖືກຂວ້ຳລົງໄປໃນນ້ຳທີ່ສົກກະປົກ ແລະ ຈົມລົງພື້ນ ແລ້ວກໍສະຫຼາຍກາຍເປັນຂີ້ຕົມ! ໂອ, ມະນຸດທັງໝົດເອີຍ ທີ່ເປັນສິ່ງຊົງສ້າງຂອງເຮົາເອງ! ໃນທີ່ສຸດພວກເຂົາກໍໄດ້ກັບຄືນມາມີຊີວິດອີກຄັ້ງໃນແສງສະຫວ່າງ, ໄດ້ຄົ້ນພົບພື້ນຖານສຳລັບການມີຊີວິດ ແລະ ຢຸດດີ້ນຣົນໃນຂີ້ຕົມ! ໂອ, ສິ່ງຕ່າງໆຂອງການຊົງສ້າງທີ່ນັບບໍ່ຖ້ວນທີ່ເຮົາຖືໃນມືຂອງເຮົາ! ພວກເຂົາບໍ່ສາມາດຖືກສ້າງຂຶ້ນໃໝ່ຜ່ານພຣະທຳຂອງເຮົາບໍ? ພວກເຂົາຈະບໍ່ມີບົດບາດໃນໜ້າທີ່ຂອງພວກເຂົາໃນແສງສະຫວ່າງໄດ້ແນວໃດ? ແຜ່ນດິນໂລກຈະບໍ່ຢຸດນິ້ງ ແລະ ມິດງຽບອີກຕໍ່ໄປ ແລະ ສະຫວັນຈະບໍ່ເປົ່າປ່ຽວ ແລະ ໂສກເສົ້າອີກຕໍ່ໄປ. ສະຫວັນ ແລະ ແຜ່ນດິນໂລກທີ່ບໍ່ຖືກແຍກໂດຍຊ່ອງວ່າງອີກຕໍ່ໄປ ຖືກຮວມເຂົ້າກັນໂດຍບໍ່ມີວັນຈະຖືກແຍກອອກອີກ. ໃນໂອກາດທີ່ປິຕິຍິນດີນີ້, ໃນຊ່ວງເວລາແຫ່ງຄວາມຍິນດີນີ້, ຄວາມຊອບທຳຂອງເຮົາ ແລະ ຄວາມບໍລິສຸດຂອງເຮົາໄດ້ແຜ່ອອກໄປທົ່ວຈັກກະວານ ແລະ ມະນຸດທຸກຄົນຈະສັນລະເສີນສິ່ງເຫຼົ່ານັ້ນຢ່າງບໍ່ຢຸດຢັ້ງ. ນະຄອນແຫ່ງສະຫວັນກຳລັງຫົວດ້ວຍຄວາມສຸກ ແລະ ອານາຈັກຂອງແຜ່ນດິນໂລກກຳລັງເຕັ້ນລຳດ້ວຍຄວາມສຸກ. ໃນເວລານີ້ ແມ່ນຜູ້ໃດທີ່ບໍ່ມີຄວາມຍິນດີ ແລະ ມີຜູ້ໃດທີ່ຍັງບໍ່ຮ້ອງໄຫ້ແດ່? ແຜ່ນດິນໂລກທີ່ຢູ່ໃນສະພາບດັ້ງເດີມຂອງມັນແມ່ນເປັນຂອງສະຫວັນ ແລະ ສະຫວັນກໍໄດ້ຮວມເຂົ້າກັນກັບແຜ່ນດິນໂລກ. ມະນຸດແມ່ນສາຍເຊືອກທີ່ຮັດສະຫວັນ ແລະ ແຜ່ນດິນໂລກເຂົ້າກັນ ແລະ ຍ້ອນຄວາມບໍລິສຸດຂອງມະນຸດ, ຍ້ອນການສ້າງມະນຸດຂຶ້ນໃໝ່, ສະຫວັນຈຶ່ງບໍ່ຖືກປິດບັງຈາກແຜ່ນດິນໂລກອີກຕໍ່ໄປ ແລະ ແຜ່ນດິນໂລກກໍບໍ່ມິດງຽບຕໍ່ສະຫວັນອີກຕໍ່ໄປ. ໃບໜ້າຂອງມະນຸດແມ່ນເຕັມໄປດ້ວຍຮອຍຍິ້ມແຫ່ງຄວາມພໍໃຈ ແລະ ເຊື່ອງຊ້ອນຢູ່ໃນຫົວໃຈຂອງພວກເຂົາທຸກຄົນແມ່ນຄວາມຫວານຊື່ນທີ່ບໍ່ມີຂອບເຂດ. ມະນຸດບໍ່ຖຽງກັບມະນຸດ ແລະ ມະນຸດບໍ່ຕີກັນ. ໃນແສງສະຫວ່າງຂອງເຮົາ ແມ່ນມີຜູ້ໃດບໍ ທີ່ບໍ່ດຳລົງຊີວິດຢ່າງສະຫງົບສຸກກັບຜູ້ອື່ນ? ໃນມື້ຂອງເຮົາ ແມ່ນມີຜູ້ໃດບໍທີ່ເຮັດໃຫ້ຊື່ຂອງເຮົາເສື່ອມເສຍ? ມະນຸດທຸກຄົນຈ້ອງເບິ່ງເຮົາດ້ວຍຄວາມເຄົາລົບນັບຖື ແລະ ໃນໃຈຂອງພວກເຂົາ ພວກເຂົາກໍຮ້ອງຫາເຮົາຢ່າງລັບໆ. ເຮົາໄດ້ຄົ້ນຫາທຸກການກະທຳຂອງມະນຸດ. ໃນທ່າມກາງມະນຸດທີ່ຖືກຊຳລະລ້າງ ແມ່ນບໍ່ມີຜູ້ໃດທີ່ບໍ່ເຊື່ອຟັງເຮົາ ແລະ ບໍ່ມີຜູ້ໃດທີ່ຈະຕັດສິນເຮົາ. ມະນຸດທຸກຄົນແມ່ນເຕັມໄປດ້ວຍອຸປະນິໄສຂອງເຮົາ. ມະນຸດທຸກຄົນກຳລັງຮູ້ຈັກເຮົາ, ກຳລັງເຂົ້າໃກ້ເຮົາ ແລະ ຮັກເຮົາ. ເຮົາຖືກຍຶດໝັ້ນໃນຈິດໃຈຂອງມະນຸດ, ຖືກສັນລະເສີນຢ່າງສູງສຸດໃນສາຍຕາຂອງມະນຸດ ແລະ ໄຫຼຜ່ານໃນເສັ້ນເລືອດຂອງມະນຸດ. ຄວາມເບີກບານໃນຫົວໃຈຂອງມະນຸດເຕັມໄປທົ່ວທຸກແຫ່ງຫົນໃນແຜ່ນດິນໂລກ, ອາກາດເຢັນ ແລະ ສົດຊື່ນ, ບໍ່ມີໝອກໜາປົກຄຸມແຜ່ນດິນອີກຕໍ່ໄປ ແລະ ດວງຕາເວັນກໍສ່ອງແສງຮຸ່ງເຫຼື້ອມ.

ບັດນີ້ ຈົ່ງເບິ່ງອານາຈັກຂອງເຮົາ ເຊິ່ງເປັນບ່ອນທີ່ເຮົາເປັນກະສັດເໜືອທຸກສິ່ງ ແລະ ເປັນບ່ອນທີ່ເຮົາຖືອຳນາດເໜືອທຸກສິ່ງ. ນັບແຕ່ຕອນເລີ່ມຕົ້ນຂອງການຊົງສ້າງຈົນຮອດຍຸກປັດຈຸບັນ, ບຸດຊາຍຂອງເຮົາ ທີ່ໄດ້ຮັບການຊີ້ນຳຈາກເຮົາ ແມ່ນໄດ້ປະສົບກັບຄວາມລຳບາກຂອງຊີວິດຢ່າງຫຼວງຫຼາຍ, ຄວາມບໍ່ຍຸຕິທຳຂອງໂລກຢ່າງຫຼວງຫຼາຍ, ການປ່ຽນແປງໃນຊີວິດຂອງໂລກມະນຸດຢ່າງຫຼວງຫຼາຍ ແຕ່ຕອນນີ້ພວກເຂົາອາໄສຢູ່ໃນແສງສະຫວ່າງຂອງເຮົາ. ຜູ້ໃດທີ່ບໍ່ຮ້ອງໄຫ້ກັບຄວາມບໍ່ຍຸຕິທຳໃນອະດີດ? ຜູ້ໃດທີ່ບໍ່ຫຼັ່ງນໍ້າຕາໃນການທົນຕໍ່ຄວາມລຳບາກເພື່ອທີ່ຈະມາຮອດປັດຈຸບັນ? ມີຜູ້ໃດບໍ ທີ່ບໍ່ຖືເອົາໂອກາດນີ້ອຸທິດຕົວເອງເພື່ອເຮົາ? ມີຜູ້ໃດບໍ ທີ່ບໍ່ຖືເອົາໂອກາດນີ້ເພື່ອສະແດງຄວາມຫຼົງໄຫຼໃນໃຈຂອງພວກເຂົາ? ມີຜູ້ໃດບໍ ໃນຊ່ວງເວລານີ້ ທີ່ບໍ່ເວົ້າໃນສິ່ງທີ່ພວກເຂົາໄດ້ຜະເຊີນ? ໃນເວລານີ້, ມະນຸດທຸກຄົນກຳລັງອຸທິດສ່ວນທີ່ດີທີ່ສຸດຂອງພວກເຂົາໃຫ້ແກ່ເຮົາ. ມີຈັກຄົນທີ່ຖືກທໍລະມານດ້ວຍຄວາມເສຍໃຈສຳລັບຄວາມໂງ່ຂອງພວກເຂົາໃນອະດີດ ແລະ ມີຈັກຄົນທີ່ກຽດຊັງຕົວເອງສຳລັບການສະແຫວງຫາໃນອະດີດ! ມະນຸດທຸກຄົນໄດ້ຮູ້ຈັກຕົວເອງ, ພວກເຂົາທຸກຄົນໄດ້ເຫັນການກະທຳຂອງຊາຕານ ແລະ ຄວາມວິເສດຂອງເຮົາ ແລະ ຕອນນີ້ພາຍໃນໃຈຂອງພວກເຂົາແມ່ນມີບ່ອນສຳລັບເຮົາ. ເຮົາຈະບໍ່ໄດ້ພົບກັບຄວາມລັງກຽດ ຫຼື ການປະຕິເສດໃນທ່າມກາງມະນຸດອີກຕໍ່ໄປ ເນື່ອງຈາກພາລະກິດທີ່ຍິ່ງໃຫຍ່ຂອງເຮົາໄດ້ສຳເລັດແລ້ວ ແລະ ບໍ່ຖືກກີດຂວາງອີກຕໍ່ໄປ. ໃນປັດຈຸບັນ ໃນທ່າມກາງບຸດຊາຍຂອງອານາຈັກຂອງເຮົາ ແມ່ນມີຜູ້ໃດບໍ ທີ່ບໍ່ໄດ້ຄິດກ່ຽວກັບເລື່ອງຂອງຕົວເອງ? ມີຜູ້ໃດບໍ ທີ່ບໍ່ມີການພິຈາລະນາເພີ່ມເຕີມ ຍ້ອນວິທີທາງປະຕິບັດພາລະກິດຂອງເຮົາ? ມີຜູ່ໃດບໍ ທີ່ໄດ້ຖວາຍຕົວເອງຢ່າງຈິງໃຈເພື່ອປະໂຫຍດຂອງເຮົາ? ຄວາມບໍ່ບໍລິສຸດໃນໃຈຂອງພວກເຈົ້າໄດ້ມີໜ້ອຍລົງແລ້ວບໍ? ຫຼື ພວກມັນໄດ້ເພີ່ມຂຶ້ນແລ້ວບໍ? ຖ້າອົງປະກອບທີ່ບໍ່ບໍລິສຸດໃນໃຈຂອງພວກເຈົ້າບໍ່ໄດ້ລຶດລົງ ແລະ ພວກມັນກໍບໍ່ໄດ້ເພີ່ມຂຶ້ນ, ເຮົາກໍຈະຖິ້ມຄົນແບບພວກເຈົ້າຢ່າງແນ່ນອນ. ສິ່ງທີ່ເຮົາຕ້ອງການແມ່ນຜູ້ຄົນທີ່ບໍລິສຸດທີ່ເຮັດຕາມຫົວໃຈຂອງເຮົາເອງ ແລະ ບໍ່ແມ່ນພວກຜີສາດທີ່ສົກກະປົກທີ່ກະບົດຕໍ່ເຮົາ. ເຖິງແມ່ນວ່າ ຄວາມຮຽກຮ້ອງຂອງເຮົາທີ່ມີຕໍ່ມະນຸດຈະບໍ່ສູງ ແຕ່ໂລກພາຍໃນຂອງຫົວໃຈຂອງມະນຸດແມ່ນຊັບຊ້ອນຫຼາຍ ຈົນມະນຸດບໍ່ສາມາດມີຄວາມພ້ອມເຮັດຕາມຄວາມປະສົງຂອງເຮົາໄດ້ ຫຼື ເຮັດໃຫ້ເຈດຕະນາຂອງເຮົາສຳເລັດລົງໂດຍໄວ. ມະນຸດສ່ວນໃຫຍ່ແມ່ນໃຊ້ຄວາມພະຍາຍາມຢ່າງລັບໆໂດຍມີຄວາມຫວັງທີ່ຈະຍຶດເອົາພວງມະໄລສຸດທ້າຍແຫ່ງໄຊຊະນະ. ມະນຸດສ່ວນໃຫຍ່ແມ່ນພະຍາຍາມຢ່າງສຸດຄວາມສາມາດໂດຍບໍ່ກ້າຂີ້ຄ້ານແມ່ນແຕ່ໜ້ອຍເລີຍ ແລະ ຢ້ານຫຼາຍທີ່ຈະຖືກຊາຕານຈັບຕົວໄປເປັນສະເລີຍຄັ້ງທີສອງ. ພວກເຂົາບໍ່ກ້າທີ່ຈະມີຄວາມບໍ່ພໍໃຈກັບເຮົາອີກຕໍ່ໄປ ແຕ່ສະແດງຄວາມຈົງຮັກພັກດີຂອງພວກເຂົາຕໍ່ໜ້າເຮົາຢ່າງຕໍ່ເນື່ອງ. ເຮົາໄດ້ຍິນຄຳເວົ້າຈິງໃຈທີ່ກ່າວໂດຍຫຼາຍຄົນ ເຊິ່ງເປັນການອະທິບາຍຈາກຫຼາຍຄົນ ກ່ຽວກັບປະສົບການທີ່ເຈັບປວດຂອງພວກເຂົາໃນທ່າມກາງຄວາມທໍລະມານ; ໃນຄວາມຍາກລຳບາກທີ່ຮ້າຍແຮງທີ່ສຸດ, ເຮົາໄດ້ເຫັນຫຼາຍຄົນຖວາຍຄວາມຈົງຮັກພັກດີຂອງພວກເຂົາໃຫ້ກັບເຮົາຢ່າງບໍ່ສິ້ນສຸດ ແລະ ເຮົາໄດ້ເບິ່ງຫຼາຍຄົນຊອກຫາທາງອອກຂະນະທີ່ພວກເຂົາຍ່າງຢູ່ເສັ້ນທາງທີ່ເຕັມໄປດ້ວຍກ້ອນຫີນ. ໃນສະຖານະການເຫຼົ່ານີ້ ພວກເຂົາບໍ່ເຄີຍຈົ່ມ; ແມ່ນແຕ່ໃນເວລາທີ່ພວກເຂົາຂ້ອນຂ້າງ

ທໍ້ແທ້ໃຈໃນການບໍ່ສາມາດຊອກຫາແສງສະຫວ່າງ, ພວກເຂົາກໍບໍ່ເຄີຍຈົ່ມແມ່ນແຕ່ຄັ້ງດຽວ. ແຕ່ເຮົາຍັງໄດ້ຍິນຫຼາຍຄົນລະບາຍດ້ວຍການສາບແຊ່ງຈາກສ່ວນເລິກຂອງຫົວໃຈຂອງພວກເຂົາ, ສາບແຊ່ງສະຫວັນ ແລະ ກ່າວໂທດແຜ່ນດິນໂລກ ແລະ ເຮົາໄດ້ເຫັນຫຼາຍຄົນປະຖິ້ມຕົວເອງກັບຄວາມສິ້ນຫວັງໃນທ່າມກາງຄວາມເສົ້າໂສກເສຍໃຈຂອງພວກເຂົາ, ໂຍນຕົວເອງຖິ້ມລົງຖັງຂີ້ເຫຍື້ອຄືກັບຂີ້ເຫຍື້ອ ເພື່ອຖືກເຄືອບດ້ວຍຄວາມສົກກະປົກ ແລະ ຄວາມເປື້ອນ. ເຮົາໄດ້ຍິນຫຼາຍຄົນຖົກຖຽງກັນຍ້ອນມີການປ່ຽນແປງໃນຕຳແໜ່ງ ທີ່ນຳໄປສູ່ການປ່ຽນແປງໃບໜ້າຂອງພວກເຂົາ ເຊິ່ງເກີດໃຫ້ມີການປ່ຽນແປງສາຍພົວພັນຂອງພວກເຂົາຕໍ່ມະນຸດດ້ວຍກັນ ເຊັ່ນວ່າ: ໝູ່ຈະຢຸດເປັນໝູ່ ແລະ ກາຍເປັນສັດຕູແລ້ວກໍໂຈມຕີກັນແລະກັນດ້ວຍລີ້ນຂອງພວກເຂົາ. ຜູ້ຄົນສ່ວນໃຫຍ່ໃຊ້ພຣະທຳຂອງເຮົາຄືລູກປືນກົນທີ່ຍິງໃສ່ຜູ້ອື່ນໂດຍບໍ່ຮູ້ຕົວ ຈົນໂລກມະນຸດທຸກບ່ອນແມ່ນເຕັມໄປດ້ວຍສຽງວຸ້ນວາຍທີ່ລົບກວນຄວາມສະຫງົບສຸກ. ໂຊກດີທີ່ມື້ນີ້ໄດ້ມາຮອດແລ້ວ; ບໍ່ສະນັ້ນ ແມ່ນໃຜຮູ້ແດ່ວ່າ ມີຈັກຄົນທີ່ອາດຈະຕາຍໄປພາຍໃຕ້ການກວາດລ້າງຢ່າງໄຮ້ຄວາມປານີຈາກການຍິງປືນກົນນີ້.

ຫຼັງຈາກອອກພຣະທຳຂອງເຮົາ ແລະ ເຝົ້າຕິດຕາມສະພາບຂອງມະນຸດທຸກຄົນ, ອານາຈັກຂອງເຮົາກໍຈະຄ່ອຍໆລົງມາສູ່ແຜ່ນດິນໂລກເທື່ອລະບາດກ້າວ. ມະນຸດບໍ່ມີຄວາມຄິດກັງວົນໃຈ ຫຼື ເຮັດໃຫ້ຕົວເອງ "ໝົກມຸ້ນ" ກັບຄົນອື່ນ ຫຼື "ຄິດແທນ" ພວກເຂົາອີກຕໍ່ໄປ. ສະນັ້ນ, ຄວາມຂັດແຍ້ງທີ່ມັກເກີດຂຶ້ນຢູ່ແຜ່ນດິນໂລກກໍຈະບໍ່ມີອີກຕໍ່ໄປ ແລະ ຫຼັງຈາກການອອກພຣະທຳຂອງເຮົາ "ອາວຸດ" ຕ່າງໆຂອງສະໄໝໃໝ່ແມ່ນຖືກຖອນຄືນ. ມະນຸດພົບຄວາມສະຫງົບສຸກອີກຄັ້ງກັບມະນຸດ, ຫົວໃຈຂອງມະນຸດແຜ່ຈິດໃຈແຫ່ງຄວາມສັນຕິສຸກອີກຄັ້ງ ແລະ ບໍ່ມີຜູ້ໃດປ້ອງກັນຕົວເອງຈາກການລັກລອບໂຈມຕີອີກຕໍ່ໄປ. ມະນຸດທຸກຄົນໄດ້ກັບຄືນສູ່ສະພາບປົກກະຕິ ແລະ ເລີ່ມຊີວິດໃໝ່. ເມື່ອອາໄສຢູ່ໃນສະພາບແວດລ້ອມໃໝ່ ກໍມີຜູ້ຄົນຈຳນວນຫຼາຍທີ່ພາກັນເບິ່ງອ້ອມຮອບສິ່ງເຫຼົ່ານັ້ນ, ຮູ້ສຶກຄືກັບວ່າພວກເຂົາໄດ້ເຂົ້າສູ່ໂລກໃໝ່ທັງໝົດ ແລະ ຍ້ອນສິ່ງນີ້ ພວກເຂົາຈຶ່ງບໍ່ສາມາດປັບຕົວໃຫ້ເຂົ້າກັບສະພາບແວດລ້ອມປັດຈຸບັນໄດ້ທັນທີ ຫຼື ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງທັນທີ. ສະນັ້ນ, ເທົ່າທີ່ມະນຸດຮູ້ ມັນຈຶ່ງເປັນກໍລະນີທີ່ວ່າ "ວິນຍານເຕັມໃຈ ແຕ່ເນື້ອໜັງອ່ອນແອ". ເຖິງວ່າ ເຮົາຈະບໍ່ໄດ້ຊີມຄວາມຂົມຂື່ນຂອງຄວາມລຳບາກຍາກແຄ້ນຂອງຕົວເອງຄືກັບມະນຸດ ແຕ່ເຖິງຢ່າງນັ້ນກໍຕາມ ເຮົາກໍຮູ້ທຸກສິ່ງທີ່ຕ້ອງຮູ້ກ່ຽວກັບຄວາມບໍ່ພຽງພໍຂອງມະນຸດ. ເຮົາຄຸ້ນເຄີຍກັບຄວາມຕ້ອງການຂອງມະນຸດຢ່າງໃກ້ຊິດ ແລະ ຄວາມເຂົ້າໃຈຂອງເຮົາ ກ່ຽວກັບຄວາມອ່ອນແອຂອງພວກເຂົາແມ່ນສົມບູນ. ຍ້ອນເຫດຜົນນີ້, ເຮົາຈຶ່ງບໍ່ລໍ້ຫຼິ້ນມະນຸດຍ້ອນຂໍ້ບົກຜ່ອງຂອງເຂົາ; ໂດຍອີງຕາມຄວາມບໍ່ຊອບທຳຂອງມະນຸດ, ເຮົາພຽງແຕ່ໃຊ້ມາດຕະການ "ສຶກສາອົບຮົມ" ທີ່ເໝາະສົມ ເພື່ອເຮັດໃຫ້ທຸກຄົນເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໄດ້ດີຂຶ້ນເພື່ອວ່າ ມະນຸດຈະຢຸດເປັນເດັກກຳພ້າພະເນຈອນ ແລະ ກາຍເປັນເດັກອ່ອນທີ່ມີບ່ອນເອີ້ນວ່າເຮືອນແທນ. ຢ່າງໃດກໍຕາມ, ການກະທຳຂອງເຮົາແມ່ນຖືກຄຸ້ມຄອງໂດຍຫຼັກການຂອງເຮົາ. ຖ້າມະນຸດບໍ່ເຕັມໃຈທີ່ຈະຮັບເອົາຄວາມສຸກຢູ່ໃນຕົວເຮົາ, ເຮົາກໍພຽງໄດ້ແຕ່ເຫັນດີນຳເທົ່ານັ້ນກັບສິ່ງທີ່ພວກເຂົາຕັ້ງໃຈໃສ່ ແລະ ສົ່ງພວກເຂົາໄປສູ່ຂຸມເລິກທີ່ສຸດ. ໃນຈຸດນີ້, ຜູ້ຄົນບໍ່ຄວນມີຄວາມບໍ່ພໍໃຈໃນຫົວໃຈ

ຂອງພວກເຂົາອີກຕໍ່ໄປ ແຕ່ທຸກຄົນຄວນສາມາດເຫັນຄວາມຊອບທຳຂອງເຮົາໃນການຈັດແຈງທີ່ເຮົາໄດ້ຈັດແຈງໄວ້. ເຮົາບໍ່ໄດ້ບັງຄັບມະນຸດໃຫ້ຮັກເຮົາ ແລະ ເຮົາບໍ່ໄດ້ໂຈມຕີມະນຸດຜູ້ໃດເພື່ອໃຫ້ຮັກເຮົາ. ໃນຕົວເຮົາແມ່ນມີຄວາມເປັນອິດສະຫຼະທັງໝົດ ແລະ ການປົດປ່ອຍທັງໝົດ. ເຖິງວ່າ ຊາຕາກຳຂອງມະນຸດແມ່ນຂຶ້ນຢູ່ກັບມືຂອງເຮົາ ແຕ່ເຮົາໄດ້ມອບຄວາມເປັນອິດສະຫຼະໃຫ້ແກ່ມະນຸດ ເຊິ່ງບໍ່ໄດ້ຂຶ້ນກັບການຄວບຄຸມຂອງເຮົາອີກຕໍ່ໄປ. ດ້ວຍວິທີນີ້ ມະນຸດຈະບໍ່ຊອກຫາວິທີທາງເພື່ອສ້າງ “ບັນຫາ” ຍ້ອນພຣະດຳລັດແຫ່ງການປົກຄອງຂອງເຮົາ ແຕ່ຈະອາໄສຄວາມໃຈກ້ວາງຂອງເຮົາແທນເພື່ອຮັບເອົາ “ການປົດປ່ອຍ”. ສະນັ້ນ, ຫຼາຍຄົນຈຶ່ງສະແຫວງຫາທາງອອກຂອງຕົວເອງພາຍໃນການປົດປ່ອຍຂອງພວກເຂົາ ແທນທີ່ຈະຖືກບັງຄັບດ້ວຍຂໍ້ກຳນົດຂອງເຮົາ.

ເຮົາໄດ້ປະຕິບັດກັບມະນຸດດ້ວຍມືທີ່ເປີດກວ້າງຕະຫຼອດ, ບໍ່ເຄີຍກີດຂວາງມະນຸດດ້ວຍບັນຫາທີ່ແກ້ໄຂບໍ່ຕົກ ແລະ ບໍ່ເຄີຍເຮັດໃຫ້ແມ່ນແຕ່ຄົນດຽວຕົກຢູ່ໃນຄວາມລຳບາກ. ມັນບໍ່ແມ່ນແບບນີ້ບໍ? ເຖິງວ່າ ຫຼາຍຄົນຈະບໍ່ຮັກເຮົາ ແຕ່ທັດສະນະຄະຕິແບບນີ້ກໍບໍ່ໄດ້ລົບກວນເຮົາ ເຊິ່ງເຮົາກໍຍັງມອບອິດສະຫຼະໃຫ້ແກ່ພວກເຂົາ ໂດຍເຮັດໃຫ້ພວກເຂົາມີອິດສະຫຼະພາບຈົນເຖິງຂັ້ນໃຫ້ພວກເຂົາລອຍນໍ້າໄປມາຢ່າງເສລີໃນທະເລແຫ່ງຄວາມຂົມຂື່ນ ແລະ ຄວາມທໍລະມານ. ຍ້ອນວ່າ ມະນຸດຄືພາຊະນະທີ່ໃຊ້ທົ່ວໄປ; ເຖິງວ່າ ເຂົາຈະເຫັນພອນທີ່ເຮົາຖືໃນມືຂອງເຮົາ ເຂົາກໍບໍ່ສົນໃຈທີ່ຈະຮັບເອົາພອນເຫຼົ່ານັ້ນ ແຕ່ຈະດຶງເອົາແສ້ຈາກມືຂອງຊາຕານແທນ ແລ້ວໃນທີ່ສຸດກໍກຳນົດຊະຕາກຳຕົນເອງໃຫ້ຖືກຊາຕານກິນເປັນ “ອາຫານ”. ແນ່ນອນ ມີບາງຄົນທີ່ໄດ້ເຫັນແສງສະຫວ່າງຂອງເຮົາດ້ວຍຕາຂອງພວກເຂົາ ແລະ ເຖິງແມ່ນວ່າ ພວກເຂົາກຳລັງດຳລົງຊີວິດຢູ່ໃນໝອກໜາຂອງຍຸກປັດຈຸບັນ ພວກເຂົາກໍບໍ່ໄດ້ສູນເສຍຄວາມເຊື່ອໃນແສງສະຫວ່າງຍ້ອນໝອກເຫຼົ່ານີ້ ແຕ່ຍັງສືບຕໍ່ງົມ ແລະ ສະແຫວງຫາຜ່ານໝອກເຫຼົ່ານັ້ນ ເຖິງແມ່ນຕາມເສັ້ນທາງຈະມີອຸປະສັກໄປທົ່ວກໍຕາມ. ເມື່ອມະນຸດກະບົດຕໍ່ເຮົາ, ເຮົາຈະໂຍນຄວາມໂກດຮ້າຍຂອງເຮົາໃສ່ເຂົາ ແລະ ດ້ວຍເຫດນັ້ນ ມະນຸດກໍອາດຈະຕາຍໄປຍ້ອນຄວາມບໍ່ເຊື່ອຟັງຂອງເຂົາ. ເມື່ອເຂົາເຊື່ອຟັງເຮົາ, ເຮົາກໍຍັງຈະລີ້ຈາກເຂົາ ເຊິ່ງວິທີນີ້ຈະປຸກຄວາມຮັກໃນສ່ວນເລິກຂອງຫົວໃຈຂອງເຂົາ ທີ່ເປັນຄວາມຮັກທີ່ບໍ່ຕ້ອງການທີ່ຈະຊັກຊວນເຮົາ ແຕ່ເພື່ອມອບຄວາມສຸກໃຫ້ກັບເຮົາ. ໃນການສະແຫວງຫາເຮົາຂອງມະນຸດ, ເຮົາໄດ້ປິດຕາຂອງເຮົາ ແລະ ຢູ່ຢ່າງງຽບໆຫຼາຍຄັ້ງ ເພື່ອດຶງເອົາຄວາມເຊື່ອທີ່ແທ້ຈິງຂອງເຂົາອອກມາ. ແຕ່ເມື່ອເຮົາບໍ່ເວົ້າ, ຄວາມເຊື່ອຂອງມະນຸດກໍປ່ຽນແປງໃນກະພິບຕາ ແລະ ທຸກສິ່ງທີ່ເຮົາເຫັນກໍຄື “ສິນຄ້າປອມ” ຂອງເຂົາ ຍ້ອນມະນຸດບໍ່ເຄີຍຮັກເຮົາຢ່າງຈິງໃຈ. ເມື່ອເຮົາສະແດງຕົວເອງເທົ່ານັ້ນ ມະນຸດທຸກຄົນຈຶ່ງສະແດງ “ຄວາມເຊື່ອ” ຢ່າງຫຼວງຫຼາຍ; ແຕ່ເມື່ອເຮົາລີ້ໃນບ່ອນລັບຂອງເຮົາ ພວກເຂົາກໍອ່ອນແອ ແລະ ບໍ່ມີຄວາມກ້າ ຄືກັບວ່າ ຢ້ານທີ່ຈະລ່ວງເກີນເຮົາ; ມີບາງຄົນເຖິງກັບບໍ່ສາມາດເຫັນໃບໜ້າຂອງເຮົາ ແລະ ເຮັດໃຫ້ເຮົາຢູ່ພາຍໃຕ້ “ຂະບວນການທີ່ເລິກເຊິ່ງ”, ດ້ວຍເຫດນັ້ນ ຈຶ່ງເປັນການປະຕິເສດຄວາມຈິງກ່ຽວກັບການມີຢູ່ຂອງເຮົາ. ຫຼາຍຄົນຍັງຄົງຢູ່ໃນສະພາບນີ້; ຫຼາຍຄົນມີຄວາມຄິດແບບນີ້. ມັນເປັນພຽງຄວາມພໍໃຈຂອງມະນຸດທຸກຄົນເພື່ອປົກປິດສິ່ງຂີ້ຮ້າຍໃນຕົວພວກເຂົາເອງ. ຍ້ອນສິ່ງນີ້ ພວກເຂົາຈຶ່ງລັງເລທີ່ຈະຮຽກຮ້ອງຄວາມສົນໃຈຕໍ່ຂໍ້ບົກຜ່ອງ

ຂອງພວກເຂົາເອງ ແລະ ມີແຕ່ຍອມຮັບຄວາມຈິງກ່ຽວກັບພຣະທຳຂອງເຮົາດ້ວຍການກັດແຂ້ວ ແລະ ປິດບັງໜ້າຕາເທົ່ານັ້ນ.

ວັນທີ 17 ມີນາ 1992

# ບົດທີ 19

ການຖືເອົາພຣະທຳຂອງເຮົາໃຫ້ເປັນພື້ນຖານໃນການຢູ່ລອດຂອງເຂົາ, ນີ້ແມ່ນພັນທະຂອງມະນຸດ. ຜູ້ຄົນຕ້ອງກຳນົດສ່ວນແບ່ງຂອງພວກເຂົາເອງໃນທຸກພາກສ່ວນຂອງພຣະທຳຂອງເຮົາ; ການບໍ່ເຮັດຕາມຈະເປັນການສະແຫວງຫາຄວາມພິນາດຂອງພວກເຂົາເອງ ແລະ ເປັນການເຊີນໃຫ້ເກີດການດູຖູກ. ມະນຸດຊາດບໍ່ຮູ້ຈັກເຮົາ ແລະ ຍ້ອນສິ່ງນີ້ ແທນທີ່ຈະນຳຊີວິດຂອງເຂົາເອງມາຫາເຮົາ ເພື່ອສະເໜີການແລກປ່ຽນກັນ ສິ່ງທີ່ເຂົາເຮັດກໍ່ຄືການແຫ່ນຂະບວນຕໍ່ໜ້າເຮົາພ້ອມດ້ວຍຂີ້ເຫຍື້ອຢູ່ໃນມືຂອງເຂົາ, ເພື່ອພະຍາຍາມເຮັດໃຫ້ເຮົາພໍໃຈ. ເຖິງຢ່າງໃດກໍ່ຕາມ, ໄກຈາກຄວາມພໍໃຈສິ່ງຕ່າງໆທີ່ພວກມັນເປັນ, ເຮົາສືບຕໍ່ຮຽກຮ້ອງຈາກມະນຸດຊາດ. ເຮົາຮັກການປະກອບສ່ວນຂອງຜູ້ຄົນ, ແຕ່ກຽດຊັງຄວາມຮຽກຮ້ອງຂອງເຂົາ. ມະນຸດທຸກຄົນມີຫົວໃຈທີ່ເຕັມໄປດ້ວຍຄວາມໂລບ; ມັນເປັນຄືກັບວ່າຫົວໃຈຂອງມະນຸດຕົກເປັນທາດໃຫ້ກັບມານຮ້າຍ ແລະ ບໍ່ມີຜູ້ໃດສາມາດເປັນອິດສະຫຼະ ແລະ ຖວາຍຫົວໃຈຂອງພວກເຂົາໃຫ້ກັບເຮົາໄດ້. ເວລາທີ່ເຮົາກ່າວ ຜູ້ຄົນຈະຟັງສຽງຂອງເຮົາດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງອົກຕັ້ງໃຈ; ແຕ່ເມື່ອເຮົາງຽບ ພວກເຂົາກໍເລີ່ມ “ກິດຈະການ” ຂອງພວກເຂົາອີກຄັ້ງ ແລະ ເຊົາໃສ່ໃຈຕໍ່ພຣະທຳຂອງເຮົາໂດຍສິ້ນເຊີງ, ຄືກັບວ່າພຣະທຳຂອງເຮົາເປັນເຄື່ອງປະກອບສຳລັບ “ກິດຈະການ” ຂອງພວກເຂົາ. ເຮົາບໍ່ເຄີຍຍຸຍານກັບມະນຸດຊາດຈັກເທື່ອ ແລະ ເຖິງຢ່າງໃດກໍຕາມ ເຮົາກໍຍັງອົດທົນ ແລະ ອົດກັ້ນຕໍ່ມະນຸດຊາດ. ແລ້ວດ້ວຍເຫດນັ້ນ ຍ້ອນຄວາມຜ່ອນຜັນຂອງເຮົາ ມະນຸດທຸກຄົນແມ່ນປະເມີນຄ່າຕົວເອງສູງເກີນໄປ ແລະ ບໍ່ສາມາດຮູ້ຈັກຕົນເອງ ແລະ ບໍ່ໄຕ່ຕອງກ່ຽວກັບຕົນເອງ; ພວກເຂົາພຽງແຕ່ເອົາປຽບຄວາມອົດທົນຂອງເຮົາເພື່ອຫຼອກລວງເຮົາ. ບໍ່ມີແມ່ນແຕ່ໜຶ່ງຄົນທ່າມກາງພວກເຂົາທີ່ໃສ່ໃຈເຮົາຢ່າງຈິງໃຈ ແລະ ບໍ່ມີແມ່ນແຕ່ໜຶ່ງຄົນທີ່ເຊີດຊູເຮົາໃຫ້ເປັນສິ່ງທີ່ມີຄ່າສຳລັບຫົວໃຈຂອງພວກເຂົາ; ມີແຕ່ເມື່ອພວກເຂົາມີຊ່ວງເວລາວ່າງ ພວກເຂົາຈຶ່ງສົນໃຈເຮົາພໍເປັນພິທີ. ຄວາມພະຍາຍາມທີ່ເຮົາໄດ້ສະຫຼະໃຫ້ກັບມະນຸດເກີນກວ່າຈະວັດແທກໄດ້; ຍິ່ງໄປກວ່ານັ້ນ ເຮົາໄດ້ປະຕິບັດພາລະກິດປະເພດທີ່ບໍ່ເຄີຍມີມາກ່ອນໃນມະນຸດ ແລະ ນອກຈາກນີ້ ເຮົາກໍໄດ້ມອບພາລະເພີ່ມເຕີມໃຫ້ກັບເຂົາ ເພື່ອວ່ານອກຈາກສິ່ງທີ່ເຮົາມີ ແລະ ສິ່ງທີ່ເຮົາເປັນ, ພວກເຂົາອາດໄດ້ຮັບຄວາມຮູ້ບາງຢ່າງ ແລະ ຜ່ານການປ່ຽນແປງບາງຢ່າງ. ເຮົາບໍ່ໄດ້ຂໍໃຫ້ຜູ້ຄົນເປັນພຽງ “ຜູ້ບໍລິໂພກ”; ເຮົາຂໍໃຫ້ພວກເຂົາເປັນ “ຜູ້ຜະລິດ” ທີ່ເອົາຊະນະຊາຕານເຊັ່ນກັນ. ເຖິງແມ່ນເຮົາບໍ່ຮຽກຮ້ອງໃຫ້ມະນຸດເຮັດຫຍັງ, ແຕ່ເຮົາກໍມີມາດຕະຖານສຳລັບຄວາມຮຽກຮ້ອງຂອງເຮົາ, ຍ້ອນມີເປົ້າໝາຍໃນສິ່ງທີ່ເຮົາເຮັດ, ຍ້ອນມີພື້ນຖານສຳລັບການປະຕິບັດຂອງເຮົາ: ເຮົາຈະບໍ່ເຮັດຫຼິ້ນໆໂດຍບໍ່ມີການວາງແຜນ ຕາມທີ່ມະນຸດຈິນຕະນາການ ຫຼື ເຮົາບໍ່ໄດ້ອອກແບບສະຫວັນ ແລະ ແຜ່ນດິນໂລກ ແລະ ສັບພະສິ່ງທັງປວງໃນແບບໃດກໍ່ຕາມທີ່ເຮົາຕ້ອງການ. ໃນພາລະກິດຂອງເຮົາ, ມະນຸດຄວນສາມາດເຫັນບາງສິ່ງ ແລະ ໄດ້ຮັບບາງສິ່ງ. ພວກເຂົາບໍ່ຄວນປະຖິ້ມຄວາມໜຸ່ມຂອງເຂົາໃນລະດູໃບໄມ້ປົ່ງຂອງພວກເຂົາ ຫຼື ປະຕິບັດຕໍ່ຊີວິດຂອງພວກເຂົາເອງ ຄືກັບເສື້ອຜ້າທີ່ເຮັດໃຫ້ຂີ້ຝຸ່ນຕິດໂດຍບໍ່ລະມັດລະວັງ; ກົງກັນຂ້າມ ພວກເຂົາ

ຄວນຢືນເຝົ້າເບິ່ງຕົນເອງຢ່າງເຄັ່ງຄັດ, ຮັບເອົາຄວາມອຸດົມສົມບູນ ເພື່ອສະໜອງໃຫ້ກັບຄວາມສຸກຂອງເຂົາເອງ ຈົນກວ່າເຂົາບໍ່ສາມາດຫັນກັບໄປຫາຊາຕານຍ້ອນເຫັນແກ່ເຮົາ ແລະ ຍ້ອນເຫັນແກ່ເຮົາ ພວກເຂົາຈະໂຈມຕີຊາຕານ. ສິ່ງທີ່ເຮົາຮຽກຮ້ອງຈາກມະນຸດບໍ່ງ່າຍແບບນີ້ບໍ?

ເມື່ອແສງສະຫວ່າງຄ່ອຍໆເລີ່ມປາກົດຂຶ້ນໃນທິດຕາເວັນອອກ, ທຸກຄົນພາຍໃນຈັກກະວານຈະໃຫ້ຄວາມສົນໃຈຕໍ່ແສງສະຫວ່າງນັ້ນຫຼາຍຂຶ້ນ. ເມື່ອນອນບໍ່ຫຼັບ, ມະນຸດກໍອອກໄປສັງເກດແຫຼ່ງກຳເນີດຂອງແສງສະຫວ່າງຈາກທິດຕາເວັນອອກນີ້. ເນື່ອງຈາກຄວາມສາມາດທີ່ຈຳກັດຂອງພວກເຂົາ ຈຶ່ງບໍ່ມີຜູ້ໃດສາມາດເຫັນແຫຼ່ງທີ່ມາຂອງແສງສະຫວ່າງນັ້ນໄດ້. ເມື່ອທຸກສິ່ງທີ່ຢູ່ພາຍໃນຈັກກະວານຖືກສ່ອງສະຫວ່າງຢ່າງສົມບູນ, ມະນຸດຕື່ນຈາກການນອນຫຼັບ ແລະ ຄວາມຝັນ ແລະ ພຽງເມື່ອນັ້ນ ພວກເຂົາຈຶ່ງຮູ້ວ່າ ມື້ຂອງເຮົາໄດ້ມາຮອດພວກເຂົາເທື່ອລະໜ້ອຍແລ້ວ. ມະນຸດທຸກຄົນສະເຫຼີມສະຫຼອງເພາະການມາຂອງແສງສະຫວ່າງ ແລະ ຍ້ອນສິ່ງນີ້ຈຶ່ງບໍ່ມີການນອນຫຼັບດົນອີກຕໍ່ໄປ ຫຼື ຈະບໍ່ໄຮ້ສະຕິອີກຕໍ່ໄປ. ພາຍໃຕ້ການເປັ່ງແສງຂອງແສງສະຫວ່າງຂອງເຮົາ, ມະນຸດທຸກຄົນຈະມີຄວາມຄິດ ແລະ ການເບິ່ງເຫັນຢ່າງຊັດເຈນ ແລະ ທັນໃດນັ້ນກໍຕື່ນຂຶ້ນສູ່ຄວາມປິຕິຍິນດີຂອງການເປັນຢູ່. ພາຍໃຕ້ການປົກຄຸມຂອງໝອກ, ເຮົາເຝົ້າເບິ່ງໂລກ. ສັດຕ່າງໆລ້ວນແລ້ວແຕ່ຢູ່ໃນການພັກຜ່ອນ; ຍ້ອນການມາຂອງແສງສະຫວ່າງທີ່ສ່ອງແສງຄ່ອຍໆ, ທຸກສິ່ງທີ່ຢູ່ໃນສັບພະສິ່ງທັງປວງຮູ້ສຶກວ່າ ຊີວິດໃໝ່ກຳລັງເຂົ້າມາໃກ້. ຍ້ອນເຫດຜົນນີ້, ສັດຕ່າງໆຈຶ່ງຄານອອກຈາກຖໍ້າຂອງພວກມັນທັງໝົດເພື່ອຊອກຫາອາຫານ. ແນ່ນອນພືດພັນຕ່າງໆກໍບໍ່ຖືກຍົກເວັ້ນ ແລະ ການເປັ່ງແສງສະຫວ່າງ ໃບໄມ້ສີຂຽວເປັ່ງປະກາຍໄປດ້ວຍຄວາມສົດໃສທີ່ງົດງາມ, ທີ່ລໍຖ້າຫຼິ້ນບົດບາດຂອງຕົວເອງເພື່ອເຮົາ ໃນຂະນະທີ່ເຮົາຢູ່ແຜ່ນດິນໂລກ. ມະນຸດທຸກຄົນປາຖະໜາການມາຂອງແສງສະຫວ່າງ ແລະ ເຖິງຢ່າງໃດກໍຕາມ ພວກເຂົາຢ້ານການມາຂອງມັນ, ກັງວົນໃນສ່ວນເລິກວ່າຄວາມຂີ້ຮ້າຍຂອງພວກເຂົາເອງຈະບໍ່ຖືກປົດບັງອີກຕໍ່ໄປ, ນີ້ກໍ່ຍ້ອນມະນຸດປະເປືອຍ ແລະ ບໍ່ມີເຄື່ອງປົກປິດຫຍັງເລີຍ. ສະນັ້ນ ຫຼາຍຄົນທີ່ຕື່ນຕົກໃຈຍ້ອນການມາຂອງແສງສະຫວ່າງ ແລະ ຢູ່ໃນສະພາວະຕົກສະເງີ້ ຍ້ອນການປາກົດຕົວຂອງແສງສະຫວ່າງ. ເມື່ອໄດ້ເຫັນແສງສະຫວ່າງ ມີຫຼາຍຄົນທີ່ເຕັມໄປດ້ວຍຄວາມສຳນຶກຜິດຢ່າງໃຫຍ່ຫຼວງ, ກຽດຊັງຄວາມບໍ່ສະອາດຂອງພວກເຂົາເອງ, ແຕ່ບໍ່ມີພະລັງທີ່ຈະປ່ຽນແປງຄວາມຈິງ, ບໍ່ສາມາດເຮັດຫຍັງໄດ້ ນອກຈາກຖ້າໃຫ້ເຮົາປະກາດການຕັດສິນ. ເມື່ອຖືກຫຼໍ່ຫຼອມໂດຍການທົນທຸກໃນຄວາມມືດ, ມີຫຼາຍຄົນທີ່ເມື່ອໄດ້ເຫັນແສງສະຫວ່າງ ແລ້ວຖືກໂຈມຕີໂດຍຄວາມໝາຍທີ່ເລິກເຊິ່ງຂອງມັນໃນທັນທີ ແລະ ນັບແຕ່ນັ້ນເປັນຕົ້ນມາໄດ້ກອດແສງສະຫວ່າງໄວ້ໃນອ້ອມກອດຂອງພວກເຂົາ, ຢ້ານຢ່າງເລິກໆທີ່ຈະສູນເສຍມັນໄປອີກຄັ້ງ. ມີຫຼາຍຄົນທີ່ເດີນທາງໄປມາໃນວຽກປະຈຳວັນທີ່ກຳລັງເຮັດຢູ່ ແທນທີ່ຈະຖືກໂຍນຖິ້ມອອກຈາກການໂຄຈອນຂອງການປາກົດຕົວຢ່າງກະທັນຫັນຂອງແສງສະຫວ່າງ, ເພາະພວກເຂົາໄດ້ຕາບອດເປັນເວລາຫຼາຍປີ ແລະ ດ້ວຍເຫດນັ້ນ ພວກເຂົາສັງເກດເຫັນວ່າ ແສງສະຫວ່າງໄດ້ມາເຖິງ, ແຕ່ບໍ່ພໍໃຈກັບແສງສະຫວ່າງນັ້ນ. ໃນໃຈຂອງມະນຸດ ເຮົາຈຶ່ງບໍ່ໄດ້ສູງສົ່ງ ຫຼື ຕໍ່າຕ້ອຍ. ສຳລັບພວກເຂົາແລ້ວມັນບໍ່ໄດ້ມີຫຍັງແຕກຕ່າງ ຖ້າເຮົາມີຕົວຕົນ ຫຼື ບໍ່ມີກໍຕາມ; ມັນຄືກັບວ່າຊີວິດຂອງຜູ້ຄົນຈະບໍ່ດຽວດາຍ

ໄປກວ່ານີ້ຖ້າເຮົາບໍ່ມີຢູ່ ແລະ ຖ້າເຮົາມີຢູ່ຈິງ ຊີວິດຂອງພວກເຂົາກໍ່ຈະບໍ່ໄດ້ຮັບຄວາມພໍໃຈຫຼາຍກວ່ານີ້. ເພາະມະນຸດບໍ່ຊື່ນຊົມເຮົາ, ຄວາມສຸກທີ່ເຮົາສາມາດມອບໃຫ້ກັບພວກເຂົາກໍມີໜ້ອຍ. ເຖິງຢ່າງໃດກໍ່ຕາມ, ທັນທີທີ່ມະນຸດຊາດເຄົາລົບບູຊາເຮົາແມ່ນແຕ່ເລັກນ້ອຍ, ເຮົາກໍຈະເຮັດໃຫ້ເກີດການປ່ຽນແປງໃນທ່າທີທີ່ເຮົາມີຕໍ່ພວກເຂົາ. ຍ້ອນເຫດຜົນນີ້, ມີແຕ່ເມື່ອມະນຸດຊາດເຂົ້າໃຈກົດເກນນີ້, ພວກເຂົາຈຶ່ງຈະໂຊກດີພໍທີ່ຈະອຸທິດຕົນເອງໃຫ້ກັບເຮົາ ແລະ ຮຽກຮ້ອງສິ່ງຕ່າງໆທີ່ເຮົາຖືຢູ່ໃນມື. ແນ່ນອນ ຄວາມຮັກທີ່ມະນຸດມີໃຫ້ກັບເຮົາ ບໍ່ໄດ້ຜູກມັດກັບຜົນປະໂຫຍດຂອງເຂົາເອງເທົ່ານັ້ນບໍ? ແນ່ນອນ ຄວາມເຊື່ອທີ່ເຂົາມີຕໍ່ເຮົາກໍບໍ່ໄດ້ຜູກມັດກັບສິ່ງທີ່ເຮົາໄດ້ມອບໃຫ້ບໍ? ເປັນໄປໄດ້ບໍວ່າ ນອກຈາກເຂົາໄດ້ເຫັນແສງສະຫວ່າງຂອງເຮົາ, ມະນຸດກໍບໍ່ສາມາດຮັກເຮົາຢ່າງຈິງໃຈໂດຍວິທີທາງແຫ່ງຄວາມເຊື່ອຂອງພວກເຂົາ? ແນ່ນອນ ກຳລັງ ແລະ ພະລັງຂອງມະນຸດບໍ່ໄດ້ຈຳກັດຢູ່ໃນເງື່ອນໄຂຂອງປັດຈຸບັນແທ້ໆບໍ? ເປັນໄປໄດ້ບໍວ່າ ມະນຸດຕ້ອງການຄວາມກ້າຫານເພື່ອຮັກເຮົາ?

ຜົນຕາມມາຂອງການເປັນຢູ່ຂອງເຮົາກໍ່ຄື ບັນດາສັບພະສິ່ງທັງປວງແມ່ນຍອມຈຳນົນຢ່າງເຊື່ອຟັງໃນບ່ອນທີ່ພວກເຂົາອາໄສຢູ່ ແລະ ເມື່ອປາສະຈາກການລົງວິໄນຂອງເຮົາ ພວກເຂົາກໍພາກັນເຮັດໃນສິ່ງທີ່ໄຮ້ສິນທຳ. ສະນັ້ນ, ພູເຂົາຈຶ່ງກາຍເປັນຊາຍແດນລະຫວ່າງປະເທດຕ່າງໆຢູ່ແຜ່ນດິນໂລກ, ນໍ້າກາຍເປັນຮົ້ວກັ້ນເພື່ອແຍກປະຊາຊົນຂອງດິນແດນຕ່າງໆອອກຈາກກັນ ແລະ ອາກາດກາຍເປັນສິ່ງທີ່ໄຫຼຈາກຄົນໜຶ່ງສູ່ຄົນໜຶ່ງໃນອາວະກາດຢູ່ເທິງແຜ່ນດິນໂລກ. ມີພຽງແຕ່ມະນຸດເທົ່ານັ້ນທີ່ບໍ່ສາມາດເຊື່ອການຮຽກຮ້ອງຈາກຄວາມປະສົງຂອງເຮົາຢ່າງແທ້ຈິງ; ນີ້ແມ່ນເຫດຜົນທີ່ເຮົາເວົ້າວ່າ ຈາກບັນດາສັບພະສິ່ງທັງປວງ ມະນຸດເທົ່ານັ້ນທີ່ຢູ່ໃນປະເພດທີ່ບໍ່ເຊື່ອຟັງ. ມະນຸດບໍ່ເຄີຍຍອມອ່ອນນ້ອມຕໍ່ເຮົາຢ່າງແທ້ຈິງ ແລະ ຍ້ອນເຫດຜົນນີ້ ເຮົາຈຶ່ງຮັກສາເຂົາໃຫ້ຢູ່ພາຍໃຕ້ວິໄນທີ່ເຄັ່ງຄັດສະເໝີມາ. ຖ້າໃນທ່າມກາງມະນຸດ, ສິ່ງທີ່ຄວນເກີດຂຶ້ນຄືການຂະຫຍາຍສະຫງ່າລາສີຂອງເຮົາທົ່ວຈັກກະວານທັງປວງ, ແລ້ວເຮົາກໍຈະນຳເອົາສະຫງ່າລາສີຂອງເຮົາທັງໝົດ ແລະ ເຮັດໃຫ້ມັນເປັນທີ່ປະຈັກຕໍ່ມະນຸດຊາດ. ເພາະໃນຄວາມສົກກະປົກຂອງພວກເຂົາ ມະນຸດບໍ່ເໝາະສົມທີ່ຈະເບິ່ງສະຫງ່າລາສີຂອງເຮົາ, ເປັນເວລາຫຼາຍພັນປີ ເຮົາບໍ່ເຄີຍອອກມາສູ່ສາທາລະນະຈັກເທື່ອ, ແຕ່ຍັງລີ້ລັບ; ຍ້ອນເຫດຜົນນີ້ ສະຫງ່າລາສີຂອງເຮົາຈຶ່ງບໍ່ເຄີຍຖືກເຮັດໃຫ້ເປັນທີ່ປະຈັກຕໍ່ໜ້າພວກເຂົາ ແລະ ພວກເຂົາຈຶ່ງຈົມຢູ່ໃນເຫວເລິກແຫ່ງຄວາມຜິດບາບຢູ່ສະເໝີ. ເຮົາໄດ້ໃຫ້ອະໄພຄວາມບໍ່ຊອບທຳຂອງພວກເຂົາ, ແຕ່ພວກເຂົາບໍ່ຮູ້ຈັກວິທີຮັກສາຕົນເອງ ແລະ ກົງກັນຂ້າມ ເປີດຕົນເອງອອກສູ່ຄວາມຜິດບາບຢູ່ສະເໝີ, ເຮັດໃຫ້ຄວາມບາບທຳຮ້າຍພວກເຂົາ. ນີ້ບໍ່ແມ່ນການຂາດຄວາມເຄົາລົບຕົນເອງ ແລະ ຂາດການຮັກຕົນເອງຂອງມະນຸດບໍ? ໃນທ່າມກາງມະນຸດ, ມີໃຜທີ່ສາມາດຮັກຢ່າງແທ້ຈິງບໍ? ຄວາມອຸທິດຂອງມະນຸດຊັ່ງໄດ້ຈັກກິໂລ? ບໍ່ມີສິ່ງເປິເປື້ອນເຈືອປົນເຂົ້າໃນສິ່ງທີ່ເອີ້ນວ່າຄວາມແທ້ຈິງຂອງມະນຸດບໍ? ຄວາມອຸທິດຂອງເຂົາບໍ່ໄດ້ປະສົມກັບຄວາມສັບສົນທັງສິ້ນບໍ? ສິ່ງທີ່ເຮົາຮຽກຮ້ອງແມ່ນຄວາມຮັກທີ່ອຸທິດຢ່າງສົມບູນຂອງພວກເຂົາ. ມະນຸດບໍ່ຮູ້ຈັກເຮົາ ແລະ ເຖິງແມ່ນເຂົາສະແຫວງເພື່ອຮູ້ຈັກເຮົາ, ເຂົາກໍຈະບໍ່ມອບຫົວໃຈທີ່ແທ້ຈິງ ແລະ ຈິງໃຈຂອງເຂົາໃຫ້ກັບເຮົາ. ເຮົາບໍ່ບີບບັງຄັບສິ່ງທີ່ມະນຸດບໍ່ເຕັມໃຈທີ່ຈະມອບຈາກມະນຸດ. ຖ້າພວກເຂົາມອບ

ຄວາມອຸທິດຂອງພວກເຮົາໃຫ້ກັບເຮົາ, ເຮົາກໍຈະຮັບເອົາມັນໂດຍບໍ່ມີການຄັດຄ້ານຢ່າງໃດເລີຍ. ເຖິງຢ່າງໃດກໍ່ຕາມ, ຖ້າພວກເຂົາບໍ່ໄວ້ວາງໃຈເຮົາ ແລະ ປະຕິເສດທີ່ຈະຖວາຍແມ່ນແຕ່ສ່ວນເລັກນ້ອຍຂອງພວກເຂົາເອງໃຫ້ກັບເຮົາ, ແລ້ວແທນທີ່ຈະເປັນທຸກໃຈກັບເລື່ອງນັ້ນ, ເຮົາຈະກຳຈັດເຂົາດ້ວຍວິທີໃດໜຶ່ງ ແລະ ຈັດແຈງຈຸດໝາຍປາຍທາງທີ່ເໝາະສົມສຳລັບພວກເຂົາ. ສຽງຟ້າຮ້ອງດັງກຶກກ້ອງໄປທົ່ວທ້ອງຟ້າຈະໂຈມຕີມະນຸດໃຫ້ລົ້ມລົງ; ໃນຂະນະທີ່ພວກເຂົາລົ້ມລົງ ພູເຂົາສູງກໍຈະຝັງພວກເຂົາ; ສັດຮ້າຍທີ່ຫິວໂຫຍຈະກິນພວກເຂົາ; ແລະ ມະຫາສະໝຸດຍິ່ງຂຶ້ນຈະຖ້ວມຫົວພວກເຂົາ. ໃນຂະນະທີ່ມະນຸດມີຂໍ້ຂັດແຍ້ງເຊິ່ງກັນແລະກັນ, ມະນຸດທຸກຄົນຈະສະແຫວງຫາຄວາມພິນາດຂອງພວກເຂົາເອງໃນໄພພິບັດທີ່ເກີດຂຶ້ນຈາກພວກເຂົາ.

ອານາຈັກກຳລັງຂະຫຍາຍທ່າມກາງມະນຸດ, ມັນກຳລັງເກີດຂຶ້ນຢູ່ໃນທ່າມກາງມະນຸດ ແລະ ມັນກຳລັງຕັ້ງຂຶ້ນທ່າມກາງມະນຸດ; ບໍ່ມີກອງກຳລັງໃດສາມາດທຳລາຍອານາຈັກຂອງເຮົາໄດ້. ຈາກປະຊາຊົນຂອງເຮົາທີ່ຢູ່ໃນອານາຈັກໃນປັດຈຸບັນ, ແມ່ນໃຜໃນພວກເຈົ້າທີ່ບໍ່ແມ່ນມະນຸດທ່າມກາງມະນຸດ? ແມ່ນໃຜໃນພວກເຈົ້າທີ່ຢູ່ນອກສະພາບການຂອງມະນຸດ? ເມື່ອຈຸດເລີ່ມຕົ້ນໃໝ່ຂອງເຮົາຖືກປະກາດອອກໃຫ້ກັບຝູງຊົນ, ມະນຸດຈະມີປະຕິກິລິຍາແນວໃດ? ເຈົ້າໄດ້ເຫັນດ້ວຍຕາຂອງເຈົ້າເອງເຖິງສະພາວະຂອງມະນຸດຊາດ; ແນ່ນອນ ເຈົ້າຍັງບໍ່ມີຄວາມຫວັງທີ່ຈະອົດກັ້ນຢູ່ໃນໂລກໃບນີ້ຕະຫຼອດໄປແມ່ນບໍ? ເຮົາກຳລັງຍ່າງທ່າມກາງປະຊາຊົນຂອງເຮົາ, ເຮົາດຳລົງຊີວິດຢູ່ທ່າມກາງປະຊາຊົນຂອງເຮົາ. ໃນປັດຈຸບັນ ຄົນທີ່ມີຄວາມຮັກທີ່ແທ້ຈິງຕໍ່ເຮົາ, ຄົນແບບນີ້ກໍເປັນສຸກ; ສັນຕິສຸກມີແກ່ຄົນທີ່ຍອມອ່ອນນ້ອມຕໍ່ເຮົາ, ພວກເຂົາຈະອາໄສຢູ່ໃນອານາຈັກຂອງເຮົາຢ່າງແນ່ນອນ. ສັນຕິສຸກມີແກ່ຄົນທີ່ຮູ້ຈັກເຮົາ, ພວກເຂົາຈະມີລິດອຳນາດໃນອານາຈັກຂອງເຮົາຢ່າງແນ່ນອນ. ສັນຕິສຸກມີແກ່ຄົນທີ່ສະແຫວງຫາເຮົາ, ພວກເຂົາຈະຫຼົບໜີຈາກພັນທະນາການຂອງຊາຕານ ແລະ ໄດ້ຮັບພອນຈາກເຮົາຢ່າງແນ່ນອນ. ສັນຕິສຸກມີແກ່ຄົນທີ່ສາມາດປະຖິ້ມຕົນເອງ, ພວກເຂົາຈະເຂົ້າສູ່ການຄອບຄອງຂອງເຮົາຢ່າງແນ່ນອນ ແລະ ສືບທອດຮັບເອົາຄວາມກະລຸນາຮັ່ງມີແຫ່ງອານາຈັກຂອງເຮົາ. ເຮົາຈະຈື່ຄົນທີ່ເຮັດນັ້ນເຮັດນີ້ເພື່ອເຫັນແກ່ເຮົາ, ເຮົາຈະໂອບກອດຄົນທີ່ສະຫຼະເພື່ອເຫັນແກ່ເຮົາຢ່າງເບີກບານໃຈ ແລະ ເຮົາຈະມອບຄວາມສຸກໃຫ້ກັບຄົນທີ່ຖວາຍໃຫ້ກັບເຮົາ. ເຮົາຈະອວຍພອນຄົນທີ່ຄົ້ນພົບຄວາມສຸກໃນພຣະທຳຂອງເຮົາ; ພວກເຂົາຈະເປັນເສົາທີ່ຄໍ້າຫຼັງຄາເຮືອນໃນອານາຈັກຂອງເຮົາຢ່າງແນ່ນອນ, ພວກເຂົາຈະມີຄວາມຮັ່ງມີທີ່ບໍ່ສາມາດທຽບໄດ້ໃນເຮືອນຂອງເຮົາຢ່າງແນ່ນອນ ແລະ ບໍ່ມີໃຜສາມາດທຽບກັບພວກເຂົາໄດ້. ພວກເຈົ້າເຄີຍຮັບເອົາພອນທີ່ໄດ້ມອບໃຫ້ກັບພວກເຈົ້າບໍ? ພວກເຈົ້າເຄີຍສະແຫວງຫາສັນຍາທີ່ສ້າງຂຶ້ນສຳລັບພວກເຈົ້າບໍ? ພາຍໃຕ້ແສງສະຫວ່າງແຫ່ງການນຳທາງຂອງເຮົາ ພວກເຈົ້າຈະສາມາດຜ່ານພົ້ນຈາກກຳມືຂອງອຳນາດແຫ່ງຄວາມມືດໄປໄດ້ຢ່າງແນ່ນອນ. ພວກເຈົ້າຈະບໍ່ສູນເສຍແສງສະຫວ່າງແຫ່ງການນຳທາງໃນທ່າມກາງຄວາມມືດຢ່າງແນ່ນອນ. ພວກເຈົ້າຈະເປັນເຈົ້ານາຍຂອງສັບພະສິ່ງທັງປວງຢ່າງແນ່ນອນ. ພວກເຈົ້າຈະຜູ້ເອົາຊະນະຕໍ່ໜ້າຊາຕານຢ່າງແນ່ນອນ. ພວກເຈົ້າຈະໄດ້ຢືນຢູ່ທ່າມກາງຝູງຄົນຈຳນວນຫຼວງຫຼາຍທີ່ເປັນພະຍານເຖິງການເອົາຊະນະຂອງເຮົາ ຕໍ່ກັບການພັງ

ທະລາຍຂອງອານາຈັກມັງກອນແດງທີ່ຍິ່ງໃຫຍ່ຢ່າງແນ່ນອນ. ແນ່ນອນວ່າ ພວກເຈົ້າຈະຕ້ອງຍຶດໝັ້ນ ແລະ ບໍ່ສັ່ນຄອນໃນແຜ່ນດິນຊີນີມ. ຜ່ານການທົນທຸກທີ່ພວກເຈົ້າໄດ້ອົດກັ້ນ, ພວກເຈົ້າຈະໄດ້ສືບທອດພອນຂອງເຮົາ ແລະ ເຈົ້າຈະສິ່ງແສງລັດສະໝີຂອງເຮົາໄປທົ່ວຈັກກະວານທັງໝົດຢ່າງແນ່ນອນ.

ວັນທີ 19 ມີນາ 1992

# ບົດທີ 20

ຄວາມຮັ່ງມີຂອງຄົວເຮືອນຂອງເຮົາແມ່ນບໍ່ສາມາດນັບໄດ້ ແລະ ບໍ່ສາມາດຢັ່ງເຖິງໄດ້, ແຕ່ມະນຸດກໍບໍ່ເຄີຍມາຫາເຮົາເພື່ອຮັບເອົາສິ່ງເຫຼົ່ານັ້ນຈັກເທື່ອ. ເຂົາບໍ່ສາມາດຮັບເອົາສິ່ງເຫຼົ່ານັ້ນດ້ວຍຕົນເອງ ຫຼື ບໍ່ສາມາດປົກປ້ອງຕົນເອງດ້ວຍຄວາມພະຍາຍາມຂອງເຂົາເອງ; ກົງກັນຂ້າມ ເຂົາໄວ້ວາງໃຈໃນຄົນອື່ນຢູ່ສະເໝີ. ໃນບັນດາຄົນທີ່ເຮົາເຝົ້າເບິ່ງ, ບໍ່ມີໃຜສະແຫວງຫາເຮົາຢ່າງຕັ້ງໃຈ ແລະ ແບບກົງໄປກົງມາ. ພວກເຂົາລ້ວນແລ້ວແຕ່ມາຢູ່ຕໍ່ໜ້າເຮົາຍ້ອນການຊຸກຈູງຂອງຄົນອື່ນ, ແລ່ນຕາມຄົນສ່ວນໃຫຍ່ ແລະ ພວກເຂົາບໍ່ເຕັມໃຈທີ່ຈະຈ່າຍລາຄາ ຫຼື ໃຊ້ເວລາເພື່ອເພີ່ມພູນຊີວິດຂອງພວກເຂົາ. ສະນັ້ນ ໃນທ່າມກາງມະນຸດ ບໍ່ມີໃຜເຄີຍດຳລົງຊີວິດຢູ່ໃນຄວາມເປັນຈິງຈັກເທື່ອ ແລະ ທຸກຄົນດຳລົງຊີວິດຢ່າງບໍ່ມີຄວາມໝາຍ. ຍ້ອນວິທີທາງ ແລະ ປະເພນີຂອງມະນຸດທີ່ຖືກຈັດຕັ້ງຂຶ້ນມາແຕ່ດົນ, ຮ່າງກາຍຂອງທຸກຄົນຈຶ່ງເຕັມໄປດ້ວຍກິ່ນອາຍຂອງດິນ. ຜົນຕາມມາກໍຄື ມະນຸດເລີ່ມບໍ່ມີຄວາມຮູ້ສຶກ, ບໍ່ສາມາດຮູ້ສຶກເຖິງຄວາມສິ້ນຫວັງຂອງໂລກ ແລະ ກົງກັນຂ້າມ ເຂົາຫຍຸ້ງຢູ່ກັບການເຮັດໃຫ້ຕົນເອງມີຄວາມສຸກເທິງແຜ່ນດິນໂລກທີ່ເຢືອກເຢັນນີ້. ຊີວິດຂອງມະນຸດບໍ່ມີຄວາມອົບອຸ່ນແມ່ນແຕ່ໜ້ອຍດຽວ ແລະ ປາສະຈາກຮ່ອງຮອຍຂອງມະນຸດ ຫຼື ແສງສະຫວ່າງທັງສິ້ນ, ແຕ່ເຂົາກໍຍັງຕາມໃຈຕົວເອງ, ພວກເຂົາປ່ອຍໃຫ້ຊີວິດໝົດຄຸນຄ່າກັບການດີ້ນລົນໂດຍບໍ່ບັນລຸຫຍັງຈັກຢ່າງ. ໃນພິບຕາດຽວ, ມື້ແຫ່ງຄວາມຕາຍກໍໃກ້ເຂົ້າມາ ແລະ ມະນຸດກໍຕາຍຢ່າງຂົມຂື່ນ. ໃນໂລກນີ້ ເຂົາບໍ່ເຄີຍສຳເລັດຫຍັງເລີຍ ຫຼື ໄດ້ຮັບຫຍັງເລີຍ, ເຂົາພຽງແຕ່ມາ ແລະ ຈາກໄປຢ່າງຮີບດ່ວນ. ໃນສາຍຕາຂອງເຮົາ ບໍ່ມີໃຜໃນບັນດາຄົນເຫຼົ່ານີ້ທີ່ນຳຫຍັງມາ ຫຼື ນຳຫຍັງໄປ ແລະ ສະນັ້ນ ມະນຸດຈຶ່ງຮູ້ສຶກວ່າໂລກນີ້ບໍ່ຍຸຕິທຳ. ແຕ່ບໍ່ມີໃຜເຕັມໃຈທີ່ຈະຮີບໜີ. ພວກເຂົາພຽງແຕ່ລໍຖ້າມື້ທີ່ສັນຍາຂອງເຮົາຈາກສະຫວັນຈະລົງມາທ່າມກາງມະນຸດໃນທັນທີທັນໃດ, ໃນເວລາທີ່ພວກເຂົາໄດ້ຫຼົງທາງ ສັນຍານັ້ນກໍຈະເຮັດໃຫ້ພວກເຂົາເບິ່ງເຫັນວິທີທາງແຫ່ງຊີວິດທີ່ນິລັນອີກຄັ້ງ. ສະນັ້ນ ມະນຸດຈຶ່ງຕັ້ງຈິດຕັ້ງໃຈໃສ່ການກະທຳ ແລະ ການປະຕິບັດທຸກຢ່າງຂອງເຮົາເພື່ອເບິ່ງວ່າ ເຮົາໄດ້ຮັກສາສັນຍາທີ່ເຮົາມີຕໍ່ເຂົາແທ້ ຫຼື ບໍ່. ເມື່ອເຂົາຢູ່ທ່າມກາງຄວາມເດືອດຮ້ອນ ຫຼື ໃນຄວາມເຈັບປວດຢ່າງຮຸນແຮງ ຫຼື ອ້ອມລ້ອມໄປດ້ວຍການທົດລອງ ແລະ ໃກ້ຈະລົ້ມລົງ, ມະນຸດກໍສາບແຊ່ງວັນເກີດຂອງເຂົາ ເພື່ອວ່າເຂົາຈະໄດ້ຫຼົບໜີຈາກບັນຫາຂອງເຂົາ ແລະ ຍ້າຍໄປຢູ່ໂລກແຫ່ງອຸດົມຄະຕິໂດຍໄວ. ແຕ່ເມື່ອການທົດລອງໄດ້ຜ່ານໄປ, ມະນຸດກໍເຕັມໄປດ້ວຍຄວາມປິຕິຍິນດີ. ເຂົາສະເຫຼີມສະຫຼອງວັນເກີດຂອງເຂົາເທິງແຜ່ນດິນໂລກ ແລະ ຂໍໃຫ້ເຮົາອວຍພອນວັນເກີດຂອງເຂົາ; ໃນເວລານັ້ນ, ມະນຸດກໍບໍ່ກ່າວເຖິງຄຳສັນຍາຈາກອະດີດອີກເລີຍ ໂດຍຢ້ານຢູ່ເລິກໆວ່າຄວາມຕາຍຈະມາເຖິງເຂົາເປັນຄັ້ງທີສອງ. ເມື່ອມືຂອງເຮົາຍົກແຜ່ນດິນໂລກຂຶ້ນ, ຜູ້ຄົນກໍເຕັ້ນລຳດ້ວຍຄວາມປິຕິຍິນດີ, ພວກເຂົາບໍ່ຮູ້ສຶກໂສກເສົ້າອີກຕໍ່ໄປ ແລະ ພວກເຂົາທຸກຄົນກໍເພິ່ງພາເຮົາ. ເມື່ອເຮົາປົກປິດໃບໜ້າຂອງເຮົາດ້ວຍມືຂອງເຮົາ ແລະ ແນບຜູ້ຄົນລົງພື້ນດິນ, ພວກເຂົາກໍຮູ້ສຶກຫັນໃຈຫອບທັນທີ ແລະ ເກືອບຈະບໍ່ສາມາດເອົາຕົວລອດໄດ້. ພວກເຂົາທຸກຄົນກໍຮ້ອງໄຫ້ຫາເຮົາ ໂດຍຢ້ານວ່າເຮົາຈະທຳລາຍພວກເຂົາ ຍ້ອນວ່າ ພວກເຂົາທຸກຄົນ

ປາຖະໜາທີ່ຈະເຫັນມື້ທີ່ເຮົາໄດ້ຮັບສະຫງ່າລາສີ. ມະນຸດຍຶດມື້ຂອງເຮົາໃຫ້ເປັນທຶນໃນການເປັນຢູ່ຂອງເຂົາ ແລະ ມັນເປັນຍ້ອນວ່າຜູ້ຄົນປາຖະໜາໃຫ້ມື້ແຫ່ງສະຫງ່າລາສີຂອງເຮົາມາເຖິງ ມະນຸດຊາດຈຶ່ງຢູ່ລອດຈົນເຖິງປັດຈຸບັນ. ພອນທີ່ປາກຂອງເຮົາບັນຍັດອອກມາ ແມ່ນໃຫ້ຄົນທີ່ເກີດໃນລະຫວ່າງຍຸກສຸດທ້າຍໂຊກດີພໍທີ່ຈະເຫັນສະຫງ່າລາສີທັງໝົດຂອງເຮົາ.

ທົ່ວທັງຍຸກຕ່າງໆ, ຫຼາຍຄົນໄດ້ຈາກໂລກນີ້ໄປດ້ວຍຄວາມຜິດຫວັງ ແລະ ດ້ວຍຄວາມບໍ່ເຕັມໃຈ ແລະ ຫຼາຍຄົນມາສູ່ໂລກນີ້ດ້ວຍຄວາມຫວັງ ແລະ ຄວາມເຊື່ອ. ເຮົາໄດ້ຈັດກຽມໃຫ້ກັບຫຼາຍຄົນທີ່ຈະມາ ແລະ ໄດ້ສົ່ງຫຼາຍຄົນໃຫ້ຈາກໄປ. ຄົນຈຳນວນຫຼວງຫຼາຍຈົນນັບບໍ່ຖ້ວນໄດ້ຜ່ານມືຂອງເຮົາໄປ. ວິນຍານຫຼາຍດວງໄດ້ຖືກໂຍນຖິ້ມລົງສູ່ແດນມໍລະນາ, ຫຼາຍຄົນໄດ້ດຳລົງຊີວິດໃນເນື້ອໜັງ ແລະ ຫຼາຍຄົນໄດ້ຕາຍ ແລະ ເກີດໃໝ່ເທິງແຜ່ນດິນໂລກ. ແຕ່ບໍ່ເຄີຍມີໃຜທີ່ໄດ້ມີໂອກາດຮັບເອົາພອນແຫ່ງອານາຈັກໃນປັດຈຸບັນ. ເຮົາໄດ້ມອບຫຼາຍສິ່ງໃຫ້ກັບມະນຸດ, ແຕ່ເຂົາໄດ້ຮັບພຽງໜ້ອຍດຽວ, ຍ້ອນການໂຈມຕີຈາກກຳລັງຂອງຊາຕານໄດ້ເຮັດໃຫ້ເຂົາບໍ່ສາມາດຮັບເອົາຄວາມຮັ່ງມີທັງໝົດຂອງເຮົາໄດ້. ເຂົາມີພຽງແຕ່ໂຊກດີທີ່ໄດ້ຮັບການເຝົ້າເບິ່ງ, ແຕ່ບໍ່ເຄີຍທີ່ຈະສາມາດຊື່ນຊົມຢ່າງສົມບູນຈັກເທື່ອ. ມະນຸດບໍ່ເຄີຍຄົ້ນພົບຄັງສົມບັດໃນຮ່າງກາຍຂອງເຂົາເພື່ອຮັບເອົາຄວາມຮັ່ງມີຂອງສະຫວັນຈັກເທື່ອ ແລະ ສະນັ້ນ ເຂົາກໍໄດ້ສູນເສຍພອນຕ່າງໆທີ່ເຮົາໄດ້ປະທານໃຫ້ກັບເຂົາ. ວິນຍານຂອງມະນຸດບໍ່ແມ່ນສິ່ງທີ່ສາມາດເຊື່ອມໂຍງມະນຸດກັບພຣະວິນຍານຂອງເຮົາແທ້ບໍ? ເປັນຫຍັງມະນຸດຈຶ່ງບໍ່ເຄີຍພົວພັນເຮົາດ້ວຍວິນຍານຂອງເຂົາຈັກເທື່ອ? ເປັນຫຍັງເຂົາຈຶ່ງສາມາດຫຍັບເຂົ້າໃກ້ເຮົາດ້ວຍເນື້ອໜັງ, ແຕ່ບໍ່ສາມາດເຮັດແບບນັ້ນກັບຝ່າຍວິນຍານ? ໃບໜ້າທີ່ແທ້ຈິງຂອງເຮົາແມ່ນມາຈາກເນື້ອໜັງບໍ? ເປັນຫຍັງມະນຸດຈຶ່ງບໍ່ຮູ້ຈັກແກ່ນແທ້ຂອງເຮົາ? ບໍ່ເຄີຍມີຮ່ອງຮອຍກ່ຽວກັບເຮົາໃນວິນຍານຂອງມະນຸດແທ້ບໍ? ເຮົາໄດ້ຫາຍໄປຈາກວິນຍານຂອງມະນຸດໂດຍສົມບູນແລ້ວບໍ? ຖ້າມະນຸດບໍ່ເຂົ້າສູ່ອານາຈັກຝ່າຍວິນຍານ, ເຂົາຈະສາມາດເຂົ້າໃຈເຈດຕະນາຂອງເຮົາໄດ້ແນວໃດ? ໃນສາຍຕາຂອງມະນຸດ ມີຫຍັງບໍທີ່ສາມາດເຂົ້າສູ່ອານາຈັກຝ່າຍວິນຍານໄດ້ໂດຍກົງ? ມີຫຼາຍຄັ້ງທີ່ເຮົາໄດ້ເອີ້ນຫາມະນຸດດ້ວຍພຣະວິນຍານຂອງເຮົາ, ແຕ່ມະນຸດກໍເຮັດຄືກັບວ່າເຂົາຖືກເຮົາແທງ, ຈ້ອງເບິ່ງເຮົາຢູ່ຫ່າງໆ ຍ້ອນຢ້ານຢ່າງໃຫຍ່ວ່າເຮົາຈະນຳພາເຂົາໄປສູ່ໂລກອີກໃບໜຶ່ງ. ມີຫຼາຍຄັ້ງທີ່ເຮົາໄດ້ສອບຖາມໃນວິນຍານຂອງມະນຸດ, ແຕ່ເຂົາກໍຍັງຄົງບໍ່ຮູ້ເມື່ອ ໂດຍຢ້ານຢ່າງແຮງວ່າເຮົາຈະເຂົ້າໄປໃນເຮືອນຂອງເຂົາ ແລະ ສວຍໂອກາດຍຶດສິ່ງຂອງທັງໝົດຂອງເຂົາ. ສະນັ້ນ ເຂົາຈຶ່ງອັດປະຕູຕັນເຮົາໄວ້ຂ້າງນອກ ໂດຍປ່ອຍໃຫ້ເຮົາບໍ່ພົບຫຍັງເລີຍນອກຈາກປະຕູເຢືອກເຢັນທີ່ອັດແຈບຢ່າງແໜ້ນ. ມີຫຼາຍຄັ້ງທີ່ມະນຸດໄດ້ລົ້ມລົງ ແລະ ເຮົາໄດ້ຊ່ວຍເຫຼືອເຂົາໄວ້, ແຕ່ຫຼັງຈາກຕື່ນຂຶ້ນ ເຂົາກໍຈາກເຮົາໄປທັນທີ ແລະ ຫຼຽວເບິ່ງເຮົາຢ່າງລະແວງ ໂດຍທີ່ຍັງບໍ່ໄດ້ຖືກສຳຜັດກັບຄວາມຮັກຂອງເຮົາເທື່ອ; ເຮົາບໍ່ເຄີຍເຮັດໃຫ້ຫົວໃຈຂອງມະນຸດອົບອຸ່ນເລີຍ. ມະນຸດເປັນສັດທີ່ໄຮ້ຄວາມຮູ້ສຶກ ແລະ ເລືອດເຢັນທີ່ສຸດ. ເຖິງແມ່ນເຂົາໄດ້ຮັບຄວາມອົບອຸ່ນຈາກອ້ອມກອດຂອງເຮົາ, ເຂົາກໍບໍ່ເຄີຍຕື້ນຕັນໃຈຍ້ອນສິ່ງນັ້ນຈັກເທື່ອ. ມະນຸດເໝືອນຄົນປ່າເຖື່ອນທີ່ຢູ່ເທິງພູເຂົາ. ເຂົາບໍ່ເຄີຍເຫັນຄຸນຄ່າຂອງຄວາມຮັກທີ່ເຮົາມີຕໍ່ມະນຸດຊາດ. ເຂົາບໍ່ເຕັມໃຈທີ່ຈະເຂົ້າຫາເຮົາ, ເລືອກທີ່

ຈະອາໄສຢູ່ເທິງພູເຂົາ ເຊິ່ງເປັນບ່ອນທີ່ເຂົາອົດກັ້ນຕໍ່ການຂົ່ມຂູ່ຂອງສັດຮ້າຍ, ແຕ່ເຂົາກໍຍັງບໍ່ເຕັມໃຈທີ່ຈະລີ້ໄພໃນຕົວເຮົາ. ເຮົາບໍ່ໄດ້ບັງຄັບມະນຸດຄົນໃດ, ເຮົາພຽງແຕ່ປະຕິບັດພາລະກິດຂອງເຮົາ. ແລ້ວມື້ນັ້ນຈະມາເຖິງ ມື້ທີ່ມະນຸດລອຍຂ້າມມະຫາສະໝຸດທີ່ກວ້າງໃຫຍ່ມາຫາເຮົາ ເພື່ອວ່າ ເຂົາອາດຈະໄດ້ຮັບຄວາມຮັ່ງມີເທິງແຜ່ນດິນໂລກ ແລະ ປະຖິ້ມຄວາມສ່ຽງທີ່ຈະຖືກກືນໂດຍທະເລ.

ໃນຂະນະທີ່ພຣະທຳຂອງເຮົາຖືກເຮັດໃຫ້ສົມບູນ, ອານາຈັກກໍຖືກກໍ່ສ້າງຂຶ້ນເທິງແຜ່ນດິນໂລກເທື່ອລະໜ້ອຍ ແລະ ມະນຸດກໍກັບຄືນສູ່ຄວາມທຳມະດາເທື່ອລະໜ້ອຍ ແລະ ສະນັ້ນ ອານາຈັກໃນຫົວໃຈຂອງເຮົາຈຶ່ງຖືກສ້າງຂຶ້ນເທິງແຜ່ນດິນໂລກ. ໃນອານາຈັກນັ້ນ, ປະຊາຊົນຂອງພຣະເຈົ້າທຸກຄົນຟື້ນຟູຊີວິດຂອງມະນຸດທຳມະດາ. ລະດູໜາວທີ່ໜາວຈັດໄດ້ຈາກໄປ, ແທນດ້ວຍໂລກແຫ່ງເມືອງລະດູໃບໄມ້ປົ່ງ ເຊິ່ງເປັນບ່ອນທີ່ມີລະດູໃບໄມ້ປົ່ງໝົດປີ. ຜູ້ຄົນຈະບໍ່ພົບກັບໂລກທີ່ມືດມົນ ແລະ ໂສກເສົ້າຂອງມະນຸດອີກຕໍ່ໄປ, ພວກເຂົາຈະບໍ່ອົດກັ້ນຕໍ່ຄວາມໜາວເຢັນຂອງໂລກມະນຸດອີກຕໍ່ໄປ. ຜູ້ຄົນບໍ່ຕີກັນ, ປະເທດຕ່າງໆບໍ່ເຮັດສົງຄາມຕໍ່ກັນ, ບໍ່ມີການເຂັ່ນຂ້າ ແລະ ນອງເລືອດຈາກການເຂັ່ນຂ້າກັນອີກຕໍ່ໄປ; ດິນແດນທັງປວງແມ່ນເຕັມໄປດ້ວຍຄວາມສຸກ ແລະ ທຸກຫົນແຫ່ງເຕັມໄປດ້ວຍຄວາມອົບອຸ່ນລະຫວ່າງມະນຸດ. ເຮົາຍ້າຍໄປທົ່ວແຜ່ນດິນໂລກ, ເຮົາມີຄວາມສຸກຈາກເທິງບັນລັງຂອງເຮົາ, ເຮົາດຳລົງຊີວິດຢູ່ທ່າມກາງດວງດາວ. ທູດສະຫວັນພາກັນຖວາຍເພງໃໝ່ ແລະ ການເຕັ້ນລຳໃໝ່ໃຫ້ກັບເຮົາ. ຄວາມອ່ອນແອຂອງພວກເຂົາເອງບໍ່ໄດ້ເຮັດໃຫ້ນໍ້າຕາໄຫຼລົງໃບໜ້າຂອງພວກເຂົາອີກຕໍ່ໄປ. ເຮົາບໍ່ໄດ້ຍິນສຽງທູດສະຫວັນຮ້ອງໄຫ້ຕໍ່ໜ້າເຮົາອີກຕໍ່ໄປ ແລະ ບໍ່ມີໃຜຕໍ່ວ່າເຮົາກ່ຽວກັບຄວາມລຳບາກອີກຕໍ່ໄປ. ມື້ນີ້ ພວກເຈົ້າທຸກຄົນດຳລົງຊີວິດຢູ່ຕໍ່ໜ້າເຮົາ; ມື້ອື່ນ ພວກເຈົ້າທຸກຄົນຈະມີຊີວິດຢູ່ໃນອານາຈັກຂອງເຮົາ. ສິ່ງນີ້ບໍ່ແມ່ນພອນຍິ່ງໃຫຍ່ທີ່ສຸດທີ່ເຮົາໄດ້ປະທານໃຫ້ກັບມະນຸດບໍ? ຍ້ອນລາຄາທີ່ພວກເຈົ້າຈ່າຍໃນມື້ນີ້, ພວກເຈົ້າຈະໄດ້ຮັບພອນໃນອະນາຄົດ ແລະ ຈະໄດ້ດຳລົງຊີວິດທ່າມກາງສະຫງ່າລາສີຂອງເຮົາ. ພວກເຈົ້າຍັງບໍ່ປາຖະໜາທີ່ຈະປະຕິບັດກັບແກ່ນແທ້ຂອງພຣະວິນຍານຂອງເຮົາບໍ? ພວກເຈົ້າຍັງປາຖະໜາທີ່ຈະຂ້າຕົນເອງບໍ? ຜູ້ຄົນເຕັມໃຈທີ່ຈະສະແຫວງຫາຄຳໝັ້ນສັນຍາທີ່ພວກເຂົາສາມາດເຫັນເຖິງແມ່ນສິ່ງເຫຼົ່ານັ້ນຈະບໍ່ໝັ້ນຄົງ, ແຕ່ບໍ່ມີໃຜເຕັມໃຈທີ່ຈະຮັບເອົາສັນຍາແຫ່ງມື້ອື່ນ ເຖິງແມ່ນສິ່ງເຫຼົ່ານັ້ນຈະໝັ້ນຄົງຕະຫຼອດໄປ. ສິ່ງຕ່າງໆທີ່ມະນຸດສາມາດເຫັນໄດ້ແມ່ນສິ່ງ ທີ່ເຮົາຈະທຳລາຍລ້າງ ແລະ ສິ່ງຕ່າງໆທີ່ມະນຸດເຂົ້າໃຈໄດ້ຍາກແມ່ນສິ່ງທີ່ເຮົາຈະເຮັດໃຫ້ສຳເລັດ. ນີ້ແມ່ນຄວາມແຕກຕ່າງລະຫວ່າງພຣະເຈົ້າ ແລະ ມະນຸດ.

ມະນຸດໄດ້ນັບມື້ຂອງເຮົາ, ແຕ່ບໍ່ມີໃຜຮູ້ຈັກມື້ທີ່ແນ່ນອນ ແລະ ສະນັ້ນ ມະນຸດຈຶ່ງພຽງແຕ່ສາມາດດຳລົງຊີວິດທ່າມກາງຄວາມມຶນມົວເທົ່ານັ້ນ. ຍ້ອນຄວາມປາຖະໜາຂອງມະນຸດດັງກ້ອງໄປທົ່ວທ້ອງຟ້າຢ່າງບໍ່ມີຂອບເຂດ ແລະ ຫຼັງຈາກນັ້ນກໍຫາຍໄປ, ມະນຸດຈຶ່ງສູນເສຍຄວາມຫວັງຄັ້ງແລ້ວຄັ້ງເລົ່າ ຈົນວ່າເຂົາໄດ້ຕົກຢູ່ໃນສະຖານະການປັດຈຸບັນຂອງເຂົາ. ເປົ້າໝາຍຂອງຖ້ອຍຄຳຂອງເຮົາບໍ່ແມ່ນເພື່ອເຮັດໃຫ້ມະນຸດສະແຫວງຫາວັນທີ ຫຼື ຂັບເຄື່ອນເຂົາໄປສູ່ຄວາມພິນາດຂອງເຂົາເອງ ຍ້ອນຄວາມໝົດຫວັງຂອງເຂົາ. ເຮົາປາຖະໜາທີ່ຈະເຮັດໃຫ້ມະນຸດຍອມຮັບສັນຍາຂອງເຮົາ ແລະ ເຮົາປາຖະໜາທີ່ຈະໃຫ້

ຜູ້ຄົນທົ່ວແຜ່ນດິນໂລກມີສ່ວນແບ່ງໃນສັນຍາຂອງເຮົາ. ສິ່ງທີ່ເຮົາຕ້ອງການແມ່ນສິ່ງມີຊີວິດທີ່ເຕັມໄປດ້ວຍຊີວິດ, ບໍ່ແມ່ນຊາກສົບທີ່ຈົມຢູ່ໃນຄວາມຕາຍ. ເມື່ອເຮົາເນີ້ງລົງເທິງໂຕະໃນອານາຈັກ, ເຮົາຈະບັນຊາທຸກຄົນເທິງແຜ່ນດິນໂລກໃຫ້ຮັບເອົາການກວດສອບຂອງເຮົາ. ເຮົາບໍ່ຍອມໃຫ້ມີສິ່ງເປິເປື້ອນຢູ່ຕໍ່ໜ້າເຮົາ. ເຮົາບໍ່ຍອມໃຫ້ມະນຸດແຊກແຊງໃນພາລະກິດຂອງເຮົາ; ທຸກຄົນທີ່ແຊກແຊງພາລະກິດຂອງເຮົາຈະຖືກໂຍນລົງຄຸກໃຕ້ດິນ ແລະ ຫຼັງຈາກທີ່ພວກເຂົາຖືກປ່ອຍອອກມາ ພວກເຂົາກໍຍັງຈະຖືກລ້ອມໄປດ້ວຍໄພພິບັດ, ຖືກໄຟເຜົາໄໝ້ເທິງແຜ່ນດິນໂລກ. ເມື່ອເຮົາເປັນເນື້ອໜັງທີ່ບັງເກີດເປັນມະນຸດ ໃຜກໍຕາມທີ່ໂຕ້ຖຽງກັບເນື້ອໜັງຂອງເຮົາກ່ຽວກັບພາລະກິດຂອງເຮົາ ຄົນນັ້ນກໍຈະຖືກເຮົາກຽດຊັງ. ມີຫຼາຍຄັ້ງທີ່ເຮົາໄດ້ເຕືອນມະນຸດທຸກຄົນວ່າເຮົາບໍ່ມີຍາດພີ່ນ້ອງເທິງແຜ່ນດິນໂລກ ແລະ ໃຜກໍຕາມທີ່ເບິ່ງເຮົາຢ່າງເທົ່າທຽມ ແລະ ດຶງເຮົາເຂົ້າຫາພວກເຂົາເພື່ອວ່າພວກເຂົາຈະໄດ້ລະລຶກເຖິງຄວາມຫຼັງທີ່ເຂົາມີກັບເຮົາ, ພວກເຂົາຈະຕົກຢູ່ໃນຄວາມພິນາດ. ນີ້ແມ່ນສິ່ງທີ່ເຮົາສັ່ງ. ໃນເລື່ອງດັ່ງກ່າວ ເຮົາຈະບໍ່ຜ່ອນຜັນໃຫ້ກັບມະນຸດແມ່ນແຕ່ໜ້ອຍດຽວ. ທຸກຄົນທີ່ແຊກແຊງໃນພາລະກິດຂອງເຮົາ ແລະ ໃຫ້ຄຳປຶກສາແກ່ເຮົາແມ່ນຈະຖືກເຮົາຂ້ຽນຕີ ແລະ ຈະບໍ່ໄດ້ຮັບການອະໄພຈາກເຮົາ. ຖ້າເຮົາບໍ່ເວົ້າຢ່າງແຈ່ມແຈ້ງ, ມະນຸດກໍຈະບໍ່ຮູ້ສຶກຕົວຈັກເທື່ອ ແລະ ຈະຕົກລົງສູ່ການຂ້ຽນຕີຂອງເຮົາໂດຍບໍ່ໄດ້ຕັ້ງໃຈ, ນັ້ນກໍເພາະວ່າ ມະນຸດບໍ່ຮູ້ຈັກເຮົາທີ່ຢູ່ໃນເນື້ອໜັງ.

ວັນທີ 20 ມີນາ 1992

# ບົດທີ 21

ມະນຸດຕົກລົງຢູ່ໃນທ່າມກາງແສງສະຫວ່າງຂອງເຮົາ ແລະ ຍຶດໝັ້ນຢູ່ໄດ້ຍ້ອນຄວາມລອດພົ້ນຂອງເຮົາ. ເມື່ອເຮົານຳຄວາມລອດພົ້ນມາສູ່ຈັກກະວານທັງປວງ, ມະນຸດກໍພະຍາຍາມຄົ້ນຫາວິທີຕ່າງໆເພື່ອເຂົ້າສູ່ກະແສແຫ່ງການຟື້ນຟູຂອງເຮົາ, ແຕ່ກໍມີຄົນທີ່ຖືກກະແສຮຸນແຮງຂອງການຟື້ນຟູນີ້ພັດອອກໄປໂດຍບໍ່ເຫຼືອຮ່ອງຮອຍເລີຍ; ມີຫຼາຍຄົນທີ່ຈົມລົງ ແລະ ຖືກກະແສນໍ້າຮຸນແຮງກືນກິນ; ແລະ ກໍມີຫຼາຍຄົນທີ່ຍຶດໝັ້ນທ່າມກາງກະແສຮຸນແຮງດັ່ງກ່າວເຊັ່ນກັນ ຜູ້ເຊິ່ງບໍ່ເຄີຍຫຼົງທາງ ແລະ ຜູ້ເຊິ່ງຕິດຕາມກະແສທີ່ຮຸນແຮງດັ່ງກ່າວຈົນເຖິງປັດຈຸບັນ. ເຮົາກ້າວໜ້າຕາມຂັ້ນຕອນກັບມະນຸດ, ແຕ່ເຖິງຢ່າງນັ້ນມະນຸດກໍບໍ່ເຄີຍຮູ້ຈັກເຮົາເລີຍ; ເຂົາພຽງແຕ່ຮູ້ຈັກເສື້ອຜ້າທີ່ເຮົາໃສ່ຢູ່ດ້ານນອກ ແຕ່ບໍ່ສົນໃຈໃນຄວາມຮັ່ງມີທີ່ເຊື່ອງຊ້ອນຢູ່ພາຍໃນຕົວເຮົາ. ເຖິງແມ່ນເຮົາຈັດກຽມໃຫ້ມະນຸດ ແລະ ສະໜອງໃຫ້ກັບເຂົາໃນແຕ່ລະມື້ ເຂົາກໍບໍ່ສາມາດຮັບເອົາຢ່າງແທ້ຈິງ, ບໍ່ສາມາດຮັບເອົາຄວາມຮັ່ງມີທຸກຢ່າງທີ່ເຮົາໄດ້ມອບໃຫ້. ບໍ່ມີຄວາມເສື່ອມຊາມໃດຂອງມະນຸດສາມາດຫຼີບໜີຈາກການສັງເກດຂອງເຮົາໄດ້; ສຳລັບເຮົາແລ້ວໂລກພາຍໃນຂອງເຂົາກໍແຈ້ງຄືກັບເດືອນແຈ້ງຢູ່ເທິງໜ້ານໍ້າ. ເຮົາບໍ່ປະຕິບັດກັບມະນຸດໃນລັກສະນະທີ່ບໍ່ຮອບຄອບ ຫຼື ທຳທ່າປະຕິບັດຕໍ່ເຂົາ; ມັນພຽງແຕ່ເປັນຍ້ອນວ່າມະນຸດບໍ່ສາມາດຮັບຜິດຊອບຕົນເອງ ແລະ ສະນັ້ນ ມະນຸດຊາດທັງປວງຈຶ່ງຊົ່ວຊ້າຢູ່ສະເໝີ ແລະ ແມ່ນແຕ່ປັດຈຸບັນ ເຂົາກໍຍັງບໍ່ສາມາດເຮັດໃຫ້ຕົນເອງຫຼຸດອອກຈາກຄວາມຊົ່ວຊ້າດັ່ງກ່າວນັ້ນໄດ້. ມະນຸດຊາດທີ່ຕໍ່າຊ້າ ແລະ ເປັນຕາສົມເພດເອີຍ! ເປັນຫຍັງມະນຸດຈຶ່ງຮັກເຮົາ ແຕ່ບໍ່ສາມາດປະຕິບັດຕາມເຈດຕະນາຂອງພຣະວິນຍານຂອງເຮົາ? ເຮົາບໍ່ໄດ້ເປີດເຜີຍຕົນເອງຕໍ່ມະນຸດຊາດຢ່າງແທ້ຈິງບໍ? ມະນຸດຊາດບໍ່ເຄີຍໄດ້ເຫັນໜ້າຂອງເຮົາແທ້ບໍ? ເປັນໄປໄດ້ບໍ່ວ່າ ເຮົາໄດ້ສະແດງຄວາມເມດຕາເລັກນ້ອຍເກີນໄປຕໍ່ມະນຸດຊາດ? ໂອ ມະນຸດຊາດທີ່ກະບົດທຸກຄົນເອີຍ! ພວກເຂົາຕ້ອງຖືກທຳລາຍລົງພາຍໃຕ້ຕີນຂອງເຮົາ; ພວກເຂົາຕ້ອງຫາຍໄປທ່າມກາງການຂ້ຽນຕີຂອງເຮົາ ແລະ ພວກເຂົາຕ້ອງຖືກໂຍນຖິ້ມຈາກບັນດາມະນຸດຊາດໃນມື້ທີ່ກິດຈະການອັນຍິ່ງໃຫຍ່ຂອງເຮົາຖືກເຮັດໃຫ້ສົມບູນ, ເພື່ອວ່າມະນຸດຊາດທັງປວງຈະຮູ້ຈັກໜ້າຂີ້ເຮິຂອງພວກເຂົາ. ຄວາມຈິງທີ່ວ່າມະນຸດບໍ່ຄ່ອຍເຫັນໜ້າເຮົາ ຫຼື ໄດ້ຍິນສຽງຂອງເຮົາ ກໍຍ້ອນແຜ່ນດິນໂລກທັງປວງສັບສົນເກີນໄປ ແລະ ສຽງວຸ້ນວາຍຂອງແຜ່ນດິນໂລກກໍຫຼາຍເກີນໄປ ແລະ ດ້ວຍເຫດນັ້ນມະນຸດຈຶ່ງຂີ້ຄ້ານເກີນໄປທີ່ຈະຄົ້ນຫາໃບໜ້າຂອງເຮົາ ແລະ ເພື່ອພະຍາຍາມເຂົ້າໃຈຈິດໃຈຂອງເຮົາ. ສິ່ງນີ້ບໍ່ແມ່ນຕົ້ນເຫດຂອງຄວາມເສື່ອມຊາມຂອງມະນຸດບໍ? ສິ່ງນີ້ບໍ່ແມ່ນເຫດຜົນທີ່ວ່າເປັນຫຍັງມະນຸດຈຶ່ງຂັດສົນບໍ? ມະນຸດຊາດທັງປວງໄດ້ຢູ່ທ່າມກາງການປັ້ນແຕ່ງຂອງເຮົາຢູ່ສະເໝີ; ຖ້າມັນບໍ່ໄດ້ເປັນແບບນັ້ນ, ຖ້າເຮົາບໍ່ໄດ້ເມດຕາ, ຜູ້ໃດຈະຢູ່ລອດຈົນເຖິງປັດຈຸບັນ? ຄວາມຮັ່ງມີທີ່ຢູ່ໃນຕົວເຮົາແມ່ນບໍ່ມີຫຍັງທຽບເທົ່າໄດ້, ແມ່ນແຕ່ໄພພິບັດທຸກຢ່າງກໍຍັງຢູ່ໃນກຳມືຂອງເຮົາ ແລະ ຜູ້ໃດຈະສາມາດຫຼີບໜີຈາກໄພພິບັດເມື່ອໃດກໍໄດ້ທີ່ພວກເຂົາຕ້ອງການບໍ? ຄຳອະທິຖານຂອງມະນຸດ ຫຼື ການຮ້ອງໄຫ້ພາຍໃນໃຈຂອງເຂົາເຮັດອະນຸຍາດໃຫ້ເຂົາເຮັດແບບນັ້ນບໍ? ມະນຸດບໍ່ເຄີຍອະທິຖານຫາເຮົາຢ່າງແທ້ຈິງ

ແລະ ດ້ວຍເຫດນັ້ນ ທ່າມກາງມະນຸດຊາດທັງປວງ ບໍ່ມີໃຜເຄີຍດຳລົງຊີວິດທັງໝົດຂອງພວກເຂົາຢູ່ທ່າມກາງແສງສະຫວ່າງແຫ່ງຄວາມຈິງເລີຍ; ຜູ້ຄົນພຽງແຕ່ດຳລົງຊີວິດໃນແສງສະຫວ່າງສ່ອງແສງແມບມາບເປັນບາງຄັ້ງບາງຄາວເທົ່ານັ້ນ. ນີ້ຄືສິ່ງທີ່ນຳໄປສູ່ຄວາມບົກຜ່ອງຂອງມະນຸດໃນປັດຈຸບັນ.

ທຸກຄົນຮ້ອນຮົນທີ່ຈະເລີ່ມປະຕິບັດ, ເຕັມໃຈທີ່ຈະພະຍາຍາມສຸດກຳລັງເພື່ອຮັບເອົາບາງຢ່າງຈາກເຮົາ ແລະ ດ້ວຍເຫດນັ້ນ ເພື່ອໃຫ້ສອດຄ່ອງກັບຈິດໃຈຂອງມະນຸດ, ເຮົາໄດ້ມອບສັນຍາໃຫ້ກັບເຂົາເພື່ອດົນບັນດານຄວາມຮັກທີ່ແທ້ຈິງໃນຕົວເຂົາ. ມັນແມ່ນຄວາມຮັກທີ່ແທ້ຈິງຂອງມະນຸດແທ້ບໍ ທີ່ໃຫ້ກຳລັງກັບເຂົາ? ມັນແມ່ນຄວາມຈົງຮັກພັກດີຂອງມະນຸດທີ່ມີຕໍ່ເຮົາບໍ ທີ່ໄດ້ດົນບັນດານພຣະວິນຍານຂອງເຮົາໃນສະຫວັນ? ສະຫວັນບໍ່ເຄີຍໄດ້ຮັບຜົນກະທົບຈາກການກະທຳຂອງມະນຸດແມ່ນແຕ່ໜ້ອຍດຽວ ແລະ ຖ້າການປະຕິບັດຂອງເຮົາຕໍ່ມະນຸດແມ່ນອີງຕາມການກະທຳທຸກຢ່າງຂອງມະນຸດ, ແລ້ວມະນຸດຊາດທັງປວງກໍຈະດຳລົງຊີວິດທ່າມກາງການຂ້ຽນຕີຂອງເຮົາ. ເຮົາໄດ້ເຫັນຫຼາຍຄົນທີ່ມີນໍ້າຕາໄຫຼລົງອາບແກ້ມຂອງພວກເຂົາ ແລະ ເຮົາໄດ້ເຫັນຫຼາຍຄົນຖວາຍຫົວໃຈຂອງພວກເຂົາເພື່ອແລກປ່ຽນກັບຄວາມຮັ່ງມີຂອງເຮົາ. ເຖິງແມ່ນວ່າຈະມີ "ຄວາມອຸທິດຕົນຢ່າງແຮງກ້າ" ດັ່ງກ່າວ, ເຮົາກໍບໍ່ເຄີຍເຕັມໃຈມອບທັງໝົດຂອງເຮົາໃຫ້ກັບມະນຸດຍ້ອນຄວາມປາຖະໜາທັນທີທັນໃດຂອງເຂົາ, ເພາະວ່າມະນຸດບໍ່ເຄີຍເຕັມໃຈທີ່ຈະອຸທິດຕົນຕໍ່ໜ້າເຮົາດ້ວຍຄວາມຍິນດີ. ເຮົາໄດ້ລອກໜ້າກາກຂອງທຸກຄົນອອກ ແລະ ໂຍນໜ້າກາກເຫຼົ່ານີ້ລົງສູ່ທະເລໄຟ ແລະ ຜົນຕາມມາກໍຄື ຄວາມຈົງຮັກພັກດີ ແລະ ການອ້ອນວອນທີ່ມະນຸດຄວນມີແມ່ນບໍ່ເຄີຍຍຶດໝັ້ນຕໍ່ໜ້າເຮົາຈັກເທື່ອ. ມະນຸດເປັນຄືກັບກ້ອນເມກທີ່ຢູ່ໃນທ້ອງຟ້າ: ເມື່ອລົມພັດຢ່າງແຮງ, ເຂົາກໍຢ້ານພະລັງອັນຍິ່ງໃຫຍ່ຂອງມັນ ແລະ ຈຶ່ງຮີບລອຍໄປຕາມມັນ, ຢ້ານຢູ່ເລິກໆວ່າເຂົາຈະຖືກໂຈມຕີໃຫ້ລົ້ມລົງຍ້ອນຄວາມບໍ່ເຊື່ອຟັງຂອງເຂົາ. ສິ່ງນີ້ບໍ່ແມ່ນໃບໜ້າຂີ້ຮ້າຍຂອງມະນຸດບໍ? ສິ່ງນີ້ບໍ່ແມ່ນສິ່ງທີ່ອ້າງວ່າຄວາມເຊື່ອຟັງຂອງມະນຸດບໍ? ສິ່ງນີ້ບໍ່ແມ່ນ "ຄວາມຮູ້ສຶກທີ່ແທ້ຈິງ" ແລະ ຄວາມປາຖະໜາດີແບບຈອມປອມຂອງມະນຸດບໍ? ຫຼາຍຄົນປະຕິເສດທີ່ຈະໝັ້ນໃຈໃນທຸກຖ້ອຍຄຳທີ່ອອກຈາກປາກຂອງເຮົາ ແລະ ຫຼາຍຄົນກໍບໍ່ຍອມຮັບເອົາການປະເມີນຂອງເຮົາ ແລະ ສະນັ້ນ ຄຳເວົ້າ ແລະ ການກະທຳຂອງພວກເຂົາຈຶ່ງເປີດໂປງເຈດຕະນາທີ່ເປັນກະບົດຂອງພວກເຂົາ. ສິ່ງທີ່ເຮົາເວົ້າເຖິງແມ່ນກົງກັນຂ້າມກັບທຳມະຊາດດັ່ງເດີມຂອງມະນຸດບໍ? ເຮົາບໍ່ໄດ້ໃຫ້ນິຍາມທີ່ເໝາະສົມກັບມະນຸດໂດຍອີງຕາມ "ກົດເກນແຫ່ງທຳມະຊາດ" ບໍ? ມະນຸດບໍ່ເຊື່ອຟັງເຮົາແທ້ໆ; ຖ້າເຂົາຄົ້ນຫາເຮົາຢ່າງແທ້ຈິງ, ເຮົາກໍຈະບໍ່ເວົ້າຫຼາຍແບບນີ້. ມະນຸດເປັນຂີ້ເຫຍື້ອທີ່ໄຮ້ຄຸນຄ່າ ແລະ ເຮົາຕ້ອງໃຊ້ການຂ້ຽນຕີຂອງເຮົາເພື່ອບັງຄັບເຂົາຕໍ່ໄປ; ຖ້າເຮົາບໍ່ເຮັດແບບນັ້ນ, ເຖິງແມ່ນສັນຍາທີ່ເຮົາໄດ້ມອບໃຫ້ກັບເຂົານັ້ນພຽງພໍສຳລັບຄວາມສຸກຂອງເຂົາ, ແລ້ວຫົວໃຈຂອງເຂົາຈະຖືກດົນບັນດານໄດ້ແນວໃດ? ມະນຸດໄດ້ດຳລົງຊີວິດຢ່າງສະເໝີມາຢູ່ທ່າມກາງຄວາມດີ້ນລົນຢ່າງເຈັບປວດເປັນເວລາຫຼາຍປີ; ສາມາດເວົ້າໄດ້ວ່າ ເຂົາໄດ້ດຳລົງຊີວິດຢູ່ກັບຄວາມສິ້ນຫວັງຕະຫຼອດເວລາ. ຜົນຕາມມາກໍຄື ເຂົາຖືກຖິ້ມໃຫ້ຢູ່ກັບຄວາມສິ້ນຫວັງ, ອ່ອນເພຍທັງກາຍ ແລະ ໃຈ; ສະນັ້ນ ເຂົາຈຶ່ງບໍ່ຮັບເອົາຄວາມຮັ່ງມີທີ່ເຮົາມອບໃຫ້ກັບເຂົາຢ່າງມີຄວາມສຸກ. ແມ່ນແຕ່ໃນປັດຈຸບັນ, ບໍ່ມີໃຜສາມາດຮັບເອົາຄວາມຫວານ

ຊື່ນຈາກຈິດວິນຍານຂອງເຮົາໄດ້ທຸກຢ່າງ. ຜູ້ຄົນຈຶ່ງຍັງທຸກຍາກ ແລະ ລໍຖ້າມື້ສຸດທ້າຍ.

ຫຼາຍຄົນປາຖະໜາທີ່ຈະຮັກເຮົາແທ້ຈິງ, ແຕ່ຍ້ອນຫົວໃຈຂອງພວກເຂົາບໍ່ແມ່ນຂອງພວກເຂົາເອງ, ພວກເຂົາຈຶ່ງບໍ່ສາມາດຄວບຄຸມເໜືອຕົນເອງ; ຫຼາຍຄົນຮັກເຮົາແທ້ຈິງໃນຂະນະທີ່ພວກເຂົາປະສົບກັບການທົດລອງທີ່ເຮົາໄດ້ມອບໃຫ້, ແຕ່ພວກເຂົາກໍບໍ່ສາມາດເຂົ້າໃຈວ່າເຮົາມີຊີວິດຢູ່ຢ່າງແທ້ຈິງ ແລະ ພຽງແຕ່ຮັກເຮົາໃນຄວາມວ່າງເປົ່າ ແລະ ບໍ່ແມ່ນຍ້ອນການເປັນຢູ່ທີ່ແທ້ຈິງຂອງເຮົາ; ຫຼາຍຄົນວາງຫົວໃຈຂອງພວກເຂົາຢູ່ຕໍ່ໜ້າເຮົາ ແລະ ກໍບໍ່ສົນໃຈຫົວໃຈຂອງພວກເຂົາ ແລະ ສະນັ້ນ ຫົວໃຈຂອງພວກເຂົາຈຶ່ງຖືກຊາຕານຍາດເອົາໄປ ເມື່ອໃດກໍຕາມທີ່ມັນມີໂອກາດ ແລະ ຫຼັງຈາກນັ້ນ ພວກເຂົາກໍປະຖິ້ມເຮົາ; ຫຼາຍຄົນຮັກເຮົາຢ່າງແທ້ຈິງ ເມື່ອເຮົາສະໜອງພຣະທຳຂອງເຮົາໃຫ້, ແຕ່ບໍ່ຖະໜຸຖະໜອມພຣະທຳຂອງເຮົາໃນຈິດວິນຍານຂອງພວກເຂົາ, ກົງກັນຂ້າມ ພວກເຂົາໃຊ້ພຣະທຳເຫຼົ່ານັ້ນແບບຊົ່ວຄາວຄືກັນກັບຊັບສິນສາທາລະນະ ແລະ ໂຍນພຣະທຳເຫຼົ່ານັ້ນກັບຄືນບ່ອນເກົ່າເມື່ອໃດກໍຕາມທີ່ພວກເຂົາຮູ້ສຶກຢາກເຮັດ. ມະນຸດຄົ້ນຫາເຮົາໃນທ່າມກາງຄວາມເຈັບປວດ ແລະ ເຂົາຫຼຽວເບິ່ງເຮົາທ່າມກາງການທົດລອງ. ໃນເວລາມີຄວາມສະຫງົບສຸກ ເຂົາກໍຊື່ນຊົມໃນຕົວເຮົາ, ເມື່ອຢູ່ໃນອັນຕະລາຍເຂົາກໍປະຕິເສດເຮົາ, ເມື່ອເຂົາຫຍຸ້ງ ເຂົາກໍລືມເຮົາ ແລະ ເມື່ອເຂົາຂີ້ຄ້ານ ເຂົາກໍທຳທ່າປະຕິບັດຕໍ່ເຮົາ, ແຕ່ບໍ່ເຄີຍມີໃຜຮັກເຮົາຕະຫຼອດທັງຊີວິດຂອງພວກເຂົາເລີຍ. ເຮົາປາຖະໜາໃຫ້ມະນຸດຈິງໃຈຕໍ່ໜ້າເຮົາ: ເຮົາບໍ່ຂໍໃຫ້ເຂົາມອບສິ່ງໃດສິ່ງໜຶ່ງໃຫ້ກັບເຮົາ, ຂໍພຽງແຕ່ໃຫ້ທຸກຄົນຈິງຈັງກັບເຮົາ, ແທນທີ່ຈະໂນ້ມນ້າວເຮົາ, ພວກເຂົາຍອມໃຫ້ເຮົານຳຄວາມຈິງໃຈຂອງມະນຸດກັບຄືນມາ. ແສງສະຫວ່າງ, ແສງເຍືອງທາງ ແລະ ຄ່າຄວາມພະຍາຍາມຂອງເຮົາປົກຄຸມໄປທົ່ວທຸກຄົນ, ເຊັ່ນດຽວກັນ ຄວາມເປັນຈິງໃນການກະທຳທຸກຢ່າງຂອງມະນຸດກໍແຜ່ລາມໄປທົ່ວທຸກຄົນ ພ້ອມກັບການຫຼອກລວງຂອງພວກເຂົາທີ່ມີຕໍ່ເຮົາ. ມັນເປັນຄືກັບວ່າ ສ່ວນປະກອບໃນການຫຼອກລວງຂອງມະນຸດຕິດຢູ່ກັບເຂົາຕັ້ງແຕ່ຢູ່ໃນທ້ອງ, ຄືກັບວ່າ ເຂົາມີທັກສະພິເສດໃນການຫຼອກລວງຕັ້ງແຕ່ເກີດ. ຍິ່ງໄປກວ່ານັ້ນ ເຂົາບໍ່ເຄີຍເປີດເຜີຍຄວາມລັບ; ບໍ່ມີໃຜເຄີຍເຫັນຜ່ານແຫຼ່ງກຳເນີດຂອງທັກສະທີ່ຫຼອກລວງເຫຼົ່ານີ້. ຜົນຕາມມາກໍຄື ມະນຸດດຳລົງຊີວິດຢູ່ທ່າມກາງການຫຼອກລວງໂດຍບໍ່ຮູ້ຕົວ ແລະ ມັນເປັນຄືກັບວ່າເຂົາໄດ້ໃຫ້ອະໄພຕົນເອງ, ຄືກັບວ່າ ມັນເປັນການປັ້ນແຕ່ງຂອງພຣະເຈົ້າແທນທີ່ຈະເປັນການຫຼອກລວງເຮົາຢ່າງຕັ້ງໃຈ. ສິ່ງນີ້ບໍ່ແມ່ນແຫຼ່ງທີ່ມາຂອງການຫຼອກລວງຂອງມະນຸດທີ່ມີຕໍ່ເຮົາຢ່າງແທ້ຈິງບໍ? ສິ່ງນີ້ບໍ່ແມ່ນກົນອຸບາຍທີ່ມີເລ່ຫຼ່ຽມຂອງເຂົາບໍ? ເຮົາບໍ່ເຄີຍສັບສົນຍ້ອນການຍົກຍໍ ແລະ ກົນອຸບາຍຂອງມະນຸດຈັກເທື່ອ, ຍ້ອນເຮົາເຂົ້າໃຈທາດແທ້ຂອງເຂົາຕັ້ງແຕ່ດົນແລ້ວ. ຜູ້ໃດຮູ້ຈັກຄວາມບໍ່ບໍລິສຸດໃນເລືອດຂອງເຂົາມີຫຼາຍປານໃດ ແລະ ມີພິດຂອງຊາຕານຫຼາຍສໍ່າໃດໃນກະດູກຂອງເຂົາ? ມະນຸດເລີ່ມລຶ້ງເຄີຍກັບສິ່ງນັ້ນໃນແຕ່ລະມື້ ຈົນວ່າເຂົາບໍ່ມີຄວາມຮູ້ສຶກເຖິງອັນຕະລາຍຈາກຊາຕານ ແລະ ດ້ວຍເຫດນັ້ນ ເຂົາຈຶ່ງບໍ່ສົນໃຈໃນການຄົ້ນຫາ “ສິລະປະແຫ່ງການເປັນຢູ່ທີ່ສົມບູນ”.

ເມື່ອມະນຸດຫ່າງເຫີນຈາກເຮົາ ແລະ ເມື່ອເຂົາທົດສອບເຮົາ, ເຮົາກໍເຊື່ອງຊ້ອນຕົນເອງຈາກເຂົາໃນກ້ອນເມກ. ຜົນຕາມມາກໍຄື ເຂົາບໍ່ສາມາດຄົ້ນພົບຮ່ອງຮອຍຂອງເຮົາໄດ້ເລີຍ ແລະ ພຽງແຕ່ດຳລົງ

ຊີວິດດ້ວຍມືຂອງຄົນຊົ່ວຮ້າຍ, ເຮັດທຸກສິ່ງທີ່ພວກເຂົາຮ້ອງຂໍ. ເມື່ອມະນຸດຢູ່ໃກ້ເຮົາ, ເຮົາກໍປາກົດຕໍ່ເຂົາ ແລະ ເຮົາບໍ່ໄດ້ເຊື່ອງໜ້າຂອງເຮົາຈາກເຂົາ ແລະ ໃນເວລານີ້ ມະນຸດກໍເຫັນໃບໜ້າແຫ່ງຄວາມກະລຸນາຂອງເຮົາ. ເຂົາກໍມີສະຕິທັນທີ ແລະ ເຖິງແມ່ນວ່າເຂົາຈະບໍ່ຮູ້ສຶກຕົວ, ຄວາມຮັກທີ່ມີຕໍ່ເຮົາແມ່ນໄດ້ເກີດຂຶ້ນໃນຕົວເຂົາແລ້ວ. ໃນຫົວໃຈຂອງເຂົາ, ເຂົາຮູ້ສຶກທັນທີເຖິງຄວາມຫວານຊື່ນທີ່ບໍ່ສາມາດປຽບທຽບໄດ້ ແລະ ນຶກແປກໃຈວ່າ ເຂົາບໍ່ສາມາດຮູ້ຈັກການເປັນຢູ່ຂອງເຮົາໃນຈັກກະວານໄດ້ແນວໃດ. ສະນັ້ນ ມະນຸດຈຶ່ງມີຄວາມຮູ້ສຶກຫຼາຍຂຶ້ນກ່ຽວກັບຄວາມເປັນຕາຮັກຂອງເຮົາ ແລະ ຍິ່ງໄປກວ່ານັ້ນຮູ້ສຶກເຖິງຄວາມລ້ຳຄ່າຂອງເຮົາ. ຜົນຕາມມາກໍຄື ເຂົາບໍ່ປາຖະໜາທີ່ຈະຈາກເຮົາໄປອີກ, ເຂົາເຫັນເຮົາເປັນແສງສະຫວ່າງແຫ່ງຄວາມຢູ່ລອດຂອງເຂົາ ແລະ ຢ້ານຢູ່ເລິກໆວ່າເຮົາຈະປະຖິ້ມເຂົາ, ເຂົາຈຶ່ງກອດເຮົາໄວ້ຢ່າງແໜ້ນ. ເຮົາບໍ່ໄດ້ຕື່ນຕັນໃຈຍ້ອນຄວາມກະຕືລືລົ້ນຂອງມະນຸດ, ແຕ່ເມດຕາຕໍ່ເຂົາ ຍ້ອນຄວາມຮັກຂອງເຮົາ. ໃນເວລານີ້ ມະນຸດດຳລົງຊີວິດທ່າມກາງການທົດລອງຂອງເຮົາ. ເມື່ອໜ້າຂອງເຮົາຫາຍໄປຈາກຫົວໃຈຂອງເຂົາ ແລະ ທັນໃດນັ້ນ ເຂົາກໍຮູ້ສຶກວ່າຊີວິດຂອງເຂົາວ່າງເປົ່າ ແລະ ເຂົາກໍມີຄວາມຄິດທີ່ຈະຫຼົບໜີ. ໃນໄລຍະນີ້, ຫົວໃຈຂອງມະນຸດຖືກເປີດອອກ. ເຂົາບໍ່ໄດ້ໂອບກອດເຮົາໄວ້ຍ້ອນອຸປະນິໄສຂອງເຮົາ, ແຕ່ຍ້ອນຄວາມຮັກຂອງເຮົາ ເຂົາຂໍໃຫ້ເຮົາປົກປ້ອງເຂົາ. ແຕ່ເມື່ອຄວາມຮັກຂອງເຮົາໂຈມຕີມະນຸດຄືນ, ເຂົາກໍປ່ຽນໃຈຂອງເຂົາທັນທີ; ເຂົາຈີກພັນທະສັນຍາຂອງເຂົາກັບເຮົາ ແລະ ໜີອອກຈາກການພິພາກສາຂອງເຮົາ, ບໍ່ເຕັມໃຈທີ່ຈະຫຼຽວເບິ່ງໜ້າແຫ່ງຄວາມກະລຸນາຂອງເຮົາອີກຄັ້ງ ແລະ ພ້ອມນັ້ນ ເຂົາກໍປ່ຽນແປງມຸມມອງຂອງເຂົາທີ່ມີກ່ຽວກັບເຮົາ ແລະ ເວົ້າວ່າເຮົາບໍ່ເຄີຍຊ່ວຍມະນຸດໃຫ້ລອດພົ້ນຈັກເທື່ອ. ຄວາມຮັກທີ່ແທ້ຈິງແມ່ນກ່ຽວພັນພຽງແຕ່ຄວາມເມດຕາແທ້ບໍ? ມະນຸດພຽງແຕ່ຮັກເຮົາຖ້າເຂົາດຳລົງຊີວິດຢູ່ພາຍໃຕ້ປະກາຍແສງສະຫວ່າງຂອງເຮົາບໍ? ເຂົາຫວນຄືນເບິ່ງມື້ວານ ແຕ່ດຳລົງຊີວິດຢູ່ໃນປັດຈຸບັນ, ນີ້ບໍ່ແມ່ນສະພາບຂອງມະນຸດບໍ? ພວກເຈົ້າຍັງຈະເປັນແບບນີ້ແທ້ບໍໃນມື້ອື່ນ? ສິ່ງທີ່ເຮົາຕ້ອງການກໍຄືໃຫ້ມະນຸດມີຫົວໃຈປາດຖະໜາເຮົາໃນສ່ວນເລິກທີ່ສຸດ, ບໍ່ມີຜູ້ໃດເຮັດໃຫ້ເຮົາພໍໃຈກັບຄວາມຜິວເຜີນ.

ວັນທີ 21 ມີນາ 1992

# ບົດທີ 22

ມະນຸດດຳລົງຊີວິດທ່າມກາງແສງສະຫວ່າງ ແຕ່ເຂົາກໍບໍ່ຮູ້ເຖິງຄວາມລ້ຳຄ່າຂອງແສງສະຫວ່າງນັ້ນ. ເຂົາບໍ່ໃສ່ໃຈຕໍ່ແກ່ນແທ້ຂອງແສງສະຫວ່າງ ແລະ ແຫຼ່ງກຳເນີດແສງສະຫວ່າງ ແລະ ຍິ່ງໄປກວ່ານັ້ນ ເຂົາບໍ່ໃສ່ໃຈວ່າ ແສງສະຫວ່າງນັ້ນເປັນຂອງໃຜ. ເມື່ອເຮົາມອບແສງສະຫວ່າງທ່າມກາງມະນຸດ, ເຮົາກວດສອບສະພາບການຕ່າງໆໃນທ່າມກາງມະນຸດທັນທີ: ຍ້ອນແສງສະຫວ່າງ, ທຸກຄົນໄດ້ປ່ຽນແປງ ແລະ ເຕີບໃຫຍ່ ແລະ ໄດ້ອອກຈາກຄວາມມືດ. ເຮົາເຝົ້າເບິ່ງຈັກກະວານໃນທຸກມຸມ ແລະ ເຫັນວ່າໝອກໄດ້ປົກຫຸ້ມພູເຂົາ, ແມ່ນ້ຳກາຍເປັນນ້ຳກ້ອນໃນຄວາມເຢືອກເຢັນ ແລະ ຍ້ອນການກັບມາຂອງແສງສະຫວ່າງ, ຜູ້ຄົນຈຶ່ງເບິ່ງໄປທາງທິດຕະເວັນອອກເພື່ອວ່າພວກເຂົາອາດຈະຄົ້ນພົບບາງສິ່ງທີ່ມີຄ່າ, ແຕ່ເຖິງຢ່າງນັ້ນມະນຸດກໍຍັງບໍ່ສາມາດເບິ່ງເຫັນທິດທາງຢ່າງຈະແຈ້ງໃນຄວາມມືດມົວໄດ້. ເພາະໂລກທັງໝົດຖືກປົກຄຸມດ້ວຍໝອກ, ເມື່ອເຮົາຫຼຽວເບິ່ງຈາກກ້ອນເມກ, ບໍ່ເຄີຍມີມະນຸດຄົນໃດທີ່ຄົ້ນພົບການເປັນຢູ່ຂອງເຮົາຈັກເທື່ອ. ມະນຸດຊອກຫາບາງສິ່ງຢູ່ເທິງແຜ່ນດິນໂລກ; ເບິ່ງຄືກັບວ່າ ເຂົາກຳລັງຫາອາຫານ; ເບິ່ງຄືກັບວ່າ ເຂົາເຈດຕະນາທີ່ຈະລໍຖ້າການມາເຖິງຂອງເຮົາ, ແຕ່ເຂົາບໍ່ຮູ້ມື້ຂອງເຮົາ ແລະ ພຽງແຕ່ສາມາດຫຼຽວເບິ່ງແສງຣິບຣີທີ່ຢູ່ທາງທິດຕະເວັນອອກເລື້ອຍໆເທົ່ານັ້ນ. ໃນບັນດາຜູ້ຄົນທັງປວງ, ເຮົາສະແຫວງຫາຄົນທີ່ສອດຄ່ອງກັບຫົວໃຈເຮົາຢ່າງແທ້ຈິງ. ເຮົາຍ່າງທ່າມກາງບັນດາຜູ້ຄົນ ແລະ ດຳລົງຊີວິດຢູ່ທ່າມກາງຜູ້ຄົນທັງປວງ, ແຕ່ມະນຸດເທິງແຜ່ນດິນໂລກມີຄວາມປອດໄພ ແລະ ໝັ້ນຄົງ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ມີໃຜທີ່ສອດຄ່ອງກັບຫົວໃຈເຮົາຢ່າງແທ້ຈິງ. ຜູ້ຄົນບໍ່ຮູ້ຈັກວິທີເອົາໃຈໃສ່ຄວາມປະສົງຂອງເຮົາ, ພວກເຂົາບໍ່ສາມາດເຫັນການກະທຳຂອງເຮົາ ແລະ ພວກເຂົາບໍ່ສາມາດເຄື່ອນໄຫວຢູ່ໃນແສງສະຫວ່າງ ແລະ ຖືກແສງສະຫວ່າງສ່ອງລົງໃສ່. ເຖິງແມ່ນມະນຸດເຊີດຊູພຣະທຳຂອງເຮົາ, ເຂົາກໍບໍ່ສາມາດເບິ່ງຜ່ານກົນອຸບາຍທີ່ລໍ້ລວງຂອງຊາຕານໄດ້; ເພາະວ່າ ວຸດທິພາວະຂອງມະນຸດແມ່ນມີຕ່ຳເກີນໄປ, ເຂົາຈຶ່ງບໍ່ສາມາດເຮັດຕາມໃຈປາຖະໜາຂອງເຂົາ. ມະນຸດບໍ່ເຄີຍຮັກເຮົາຢ່າງຈິງໃຈຈັກເທື່ອ. ເມື່ອເຮົາຍົກຍ້ອງເຂົາ, ເຂົາກໍຮູ້ສຶກວ່າຕົນເອງບໍ່ສົມຄວນ, ແຕ່ສິ່ງນີ້ບໍ່ເຮັດໃຫ້ເຂົາພະຍາຍາມເຮັດໃຫ້ເຮົາພໍໃຈ. ເຂົາພຽງແຕ່ຍຶດເອົາ "ຕຳແໜ່ງ" ທີ່ເຮົາມອບໃຫ້ເຂົານັ້ນໄວ້ຢູ່ໃນກຳມືຂອງເຂົາ ແລະ ກວດເບິ່ງມັນຢ່າງໃກ້ຊິດ; ເຂົາເສີຍເມີຍຕໍ່ຄວາມເປັນຕາຮັກຂອງເຮົາ, ກົງກັນຂ້າມ ເຂົາສືບຕໍ່ມົກມຸ້ນຢູ່ກັບຜົນປະໂຫຍດຈາກຕຳແໜ່ງຂອງເຂົາ. ນີ້ບໍ່ແມ່ນຄວາມບົກຜ່ອງຂອງມະນຸດບໍ? ເມື່ອພູເຂົາເໜັງຕີງ, ພວກມັນສາມາດລ້ຽວຫຼີບໜີຍ້ອນເຫັນແກ່ຕຳແໜ່ງຂອງເຈົ້າບໍ? ເມື່ອແມ່ນ້ຳໄຫຼ, ພວກມັນສາມາດເຊົາໄຫຼເມື່ອຢູ່ຕໍ່ໜ້າຕຳແໜ່ງຂອງມະນຸດບໍ? ສະຫວັນ ແລະ ແຜ່ນດິນໂລກສາມາດຖອຍຫຼັງກັບຍ້ອນຕຳແໜ່ງຂອງມະນຸດບໍ? ຄັ້ງໜຶ່ງ ເຮົາເຄີຍເມດຕາຕໍ່ມະນຸດ ຄັ້ງແລ້ວຄັ້ງເລົ່າ, ແຕ່ບໍ່ມີໃຜຊື່ນຊົມ ຫຼື ເຊີດຊູສິ່ງນີ້ເລີຍ. ພວກເຂົາພຽງແຕ່ຟັງສິ່ງນັ້ນຄືກັບວ່າເປັນເລື່ອງເລົ່າ ຫຼື ອ່ານມັນຄືກັບວ່າເປັນນິຍາຍ. ພຣະທຳຂອງເຮົາບໍ່ໄດ້ດົນໃຈມະນຸດແທ້ບໍ? ຖ້ອຍຄຳຂອງເຮົາບໍ່ມີຜົນຫຍັງແທ້ບໍ? ເປັນໄປໄດ້ບໍວ່າບໍ່ມີໃຜເຊື່ອໃນການເປັນຢູ່ຂອງເຮົາເລີຍ? ມະນຸດບໍ່ຮັກຕົນເອງ; ກົງກັນຂ້າມ ເຂົາເຂົ້າຮ່ວມກັບຊາຕານ

ເພື່ອໂຈມຕີເຮົາ ແລະ ໃຊ້ຊາຕານເປັນ "ເຄື່ອງມື" ເພື່ອຮັບໃຊ້ເຮົາ. ເຮົາຈະແຊກຊຶມເຂົ້າໄປໃນກົນອຸບາຍທີ່ຫຼອກລວງທຸກຢ່າງຂອງຊາຕານ ແລະ ຢຸດຜູ້ຄົນທີ່ຢູ່ເທິງແຜ່ນດິນໂລກຈາກການຮັບເອົາການລໍ້ລວງຂອງຊາຕານອີກຕໍ່ໄປ ເພື່ອວ່າ ພວກເຂົາຈະບໍ່ຕໍ່ຕ້ານເຮົາ ຍ້ອນການເປັນຢູ່ຂອງມັນອີກ.

ໃນອານາຈັກ, ເຮົາເປັນກະສັດ ແຕ່ແທນທີ່ຈະປະຕິບັດຕໍ່ເຮົາຄືກັບກະສັດຂອງເຂົາ ມະນຸດກັບປະຕິບັດຕໍ່ເຮົາຄືກັບພຣະຜູ້ຊ່ວຍໃຫ້ລອດທີ່ລົງມາຈາກສະຫວັນ. ຜົນຕາມມາກໍຄື ເຂົາປາຖະໜາທີ່ຈະໃຫ້ເຮົາຖວາຍທານໃຫ້ເຂົາ ແລະ ບໍ່ສະແຫວງຫາຄວາມຮູ້ກ່ຽວກັບຕົວເຮົາເລີຍ. ຫຼາຍຄົນໄດ້ຮ້ອງໄຫ້ຢູ່ຕໍ່ໜ້າເຮົາຄືກັບເປັນຄົນຂໍທານ; ຫຼາຍຄົນໄດ້ເປີດ "ຖົງ" ຂອງພວກເຂົາຕໍ່ເຮົາ ແລະ ອ້ອນວອນຂໍໃຫ້ເຮົາມອບອາຫານໃຫ້ພວກເຂົາເພື່ອຢູ່ລອດ; ຫຼາຍຄົນຈ້ອງຕາທີ່ໂລພາຂອງພວກເຂົາໃສ່ເຮົາ ຄືກັນກັບໝາປ່າທີ່ຫິວໂຫຍ ໂດຍຫວັງວ່າພວກເຂົາຈະສາມາດກືນກິນເຮົາ ແລະ ອີ່ມທ້ອງພວກເຂົາ; ຫຼາຍຄົນໄດ້ກົ້ມຫົວຂອງພວກເຂົາລົງຢ່າງງຽບໆ ຍ້ອນວ່າພວກເຂົາໄດ້ຝ່າຝືນ ແລະ ຮູ້ສຶກອັບອາຍ, ອະທິຖານຫາຄວາມເມດຕາກະລຸນາຂອງເຮົາ ຫຼື ເຕັມໃຈຮັບເອົາການຂ້ຽນຕີຂອງເຮົາ. ເມື່ອເຮົາກ່າວພຣະຄຳຂອງເຮົາອອກມາ, ຫຼາກຫຼາຍຄວາມໂງ່ຂອງມະນຸດປະກົດວ່າເປັນຕາຢາກຫົວ ແລະ ຮູບຮ່າງທີ່ແທ້ຈິງຂອງເຂົາແມ່ນຖືກເປີດໂປງໃນບ່ອນແຈ້ງ ແລະ ໃນແສງສະຫວ່າງນັ້ນ, ມະນຸດບໍ່ສາມາດໃຫ້ອະໄພຕົນເອງໄດ້. ສະນັ້ນ ເຂົາຈຶ່ງຟ້າວມາຢູ່ຕໍ່ໜ້າເຮົາເພື່ອກົ້ມລົງ ແລະ ສາລະພາບຄວາມບາບຂອງເຂົາ. ຍ້ອນ "ຄວາມຊື່ສັດ" ຂອງມະນຸດ, ເຮົາຈຶ່ງດຶງເຂົາຂຶ້ນເທິງລົດມ້າແຫ່ງຄວາມລອດພົ້ນອີກຄັ້ງ ແລະ ດ້ວຍເຫດນີ້ ເຂົາກໍຮູ້ບຸນຄຸນເຮົາ ແລະ ສະແດງສີໜ້າອັນເປັນຕາຮັກຕໍ່ເຮົາ. ແຕ່ເຂົາກໍຍັງບໍ່ເຕັມໃຈທີ່ຈະລີ້ໄພໃນຕົວເຮົາຢ່າງແທ້ຈິງ ແລະ ເຂົາຍັງບໍ່ໄດ້ມອບຫົວໃຈຂອງເຂົາໃຫ້ກັບເຮົາຢ່າງສົມບູນ. ເຂົາພຽງແຕ່ໂອ້ອວດເຖິງເຮົາ, ແຕ່ເຂົາບໍ່ໄດ້ຮັກເຮົາຢ່າງແທ້ຈິງ ຍ້ອນເຂົາບໍ່ໄດ້ຫັນຄວາມຄິດຂອງເຂົາເຂົ້າຫາເຮົາ; ຮ່າງກາຍຂອງເຂົາແມ່ນຢູ່ຕໍ່ໜ້າເຮົາ, ແຕ່ຫົວໃຈຂອງເຮົາແມ່ນຢູ່ຂ້າງຫຼັງເຮົາ. ເພາະຄວາມເຂົ້າໃຈຂອງມະນຸດກ່ຽວກັບກົດເກນແມ່ນຕື້ນເຂີນຫຼາຍ ແລະ ເຂົາບໍ່ສົນໃຈທີ່ຈະມາຢູ່ຕໍ່ໜ້າເຮົາ, ເຮົາຈຶ່ງສະໜອງເຂົາຢ່າງເໝາະສົມເພື່ອວ່າເຂົາອາດຫັນມາຫາເຮົາ ແລ້ວອອກຈາກຄວາມໂງ່ຈ້າທີ່ດື້ດຶງຂອງເຂົາ. ນີ້ແມ່ນຄວາມເມດຕາທີ່ເຮົາມອບໃຫ້ກັບມະນຸດ ແລະ ເປັນວິທີການທີ່ເຮົາພະຍາຍາມຊ່ວຍເຂົາໃຫ້ລອດພົ້ນ.

ຜູ້ຄົນທົ່ວທັງຈັກກະວານສະຫຼອງການມາເຖິງຂອງມື້ຂອງເຮົາ ແລະ ທູດສະຫວັນກໍຍ່າງທ່າມກາງປະຊາຊົນທັງໝົດຂອງເຮົາ. ເມື່ອຊາຕານສ້າງບັນຫາ, ທູດສະຫວັນກໍຈະຊ່ວຍຄົນຂອງເຮົາຢູ່ສະເໝີຍ້ອນການຮັບໃຊ້ຂອງພວກເຂົາທີ່ຢູ່ໃນສະຫວັນ. ພວກເຂົາບໍ່ໄດ້ຖືກລໍ້ລວງໂດຍມານຮ້າຍຍ້ອນຄວາມອ່ອນແອຂອງມະນຸດ ແຕ່ຍ້ອນການໂຈມຕີຢ່າງຕໍ່ເນື່ອງຈາກອຳນາດແຫ່ງຄວາມມືດ ພວກເຂົາຍິ່ງພະຍາຍາມຫຼາຍກວ່າເດີມເພື່ອສຳພັດກັບຊີວິດຂອງມະນຸດຜ່ານເມກໝອກ. ຄົນຂອງເຮົາທຸກຄົນຍອມຢູ່ພາຍໃຕ້ພຣະນາມຂອງເຮົາ ແລະ ບໍ່ມີໃຜເຄີຍລຸກຂຶ້ນເພື່ອຕໍ່ຕ້ານເຮົາຢ່າງເປີດເຜີຍຈັກເທື່ອ. ຍ້ອນຄວາມພະຍາຍາມຢ່າງໜັກຂອງທູດສະຫວັນ, ມະນຸດຈຶ່ງຍອມຮັບພຣະນາມຂອງເຮົາ ແລະ ທຸກຄົນຈຶ່ງຢູ່ທ່າມກາງກະແສແຫ່ງພາລະກິດຂອງເຮົາ. ແຜ່ນດິນໂລກກຳລັງຫຼົ້ມຈົມ! ບາບີໂລນກຳລັງເປັນອຳມະພາດ! ໂອ ໂລກແຫ່ງສາສະໜາເອີຍ! ມັນຈະບໍ່ຖືກທຳລາຍດ້ວຍລິດອຳນາດຂອງເຮົາຢູ່ເທິງໂລກໄດ້

ແນວໃດ? ຜູ້ໃດຍັງກ້າບໍ່ເຊື່ອຟັງ ແລະ ກ້າຕໍ່ຕ້ານເຮົາ? ພວກທຳມະຈານບໍ? ເຈົ້າໜ້າທີ່ສາສະໜາທຸກຄົນບໍ? ຜູ້ປົກຄອງ ແລະ ຜູ້ມີອຳນາດເທິງແຜ່ນດິນໂລກບໍ? ທູດສະຫວັນບໍ? ຜູ້ໃດບໍ່ສະຫຼອງຄວາມສົມບູນ ແລະ ຄວາມບໍລິບູນໃນຮ່າງກາຍຂອງເຮົາ? ໃນບັນດາຜູ້ຄົນທັງປວງ, ແມ່ນໃຜບໍ່ຮ້ອງສັນລະເສີນເຮົາຢ່າງບໍ່ສິ້ນສຸດ, ແມ່ນໃຜທີ່ບໍ່ມີຄວາມສຸກຕະຫຼອດການ? ເຮົາດຳລົງຊີວິດຢູ່ໃນດິນແດນທີ່ເປັນບ່ອນຫຼົບຊ້ອນຂອງມັງກອນແດງທີ່ຍິ່ງໃຫຍ່, ແຕ່ສິ່ງນີ້ບໍ່ໄດ້ເຮັດໃຫ້ເຮົາສັ່ນຢ້ານ ຫຼື ແລ່ນໜີ, ຍ້ອນທຸກຄົນທີ່ຢູ່ໃນທີ່ນັ້ນກໍເລີ່ມເບື່ອກັບມັນແລ້ວ. ບໍ່ເຄີຍມີສິ່ງໃດໃນ "ໜ້າທີ່" ຂອງມັນໄດ້ຖືກປະຕິບັດຕໍ່ໜ້າມັງກອນເພື່ອເຫັນແກ່ມັງກອນຈັກເທື່ອ; ກົງກັນຂ້າມ, ທຸກສິ່ງທີ່ປະຕິບັດຄືສິ່ງທີ່ພວກເຂົາເຫັນວ່າເໝາະສົມ ແລະ ແຕ່ລະຢ່າງກໍໄປຕາມເສັ້ນທາງຂອງມັນເອງ. ບັນດາປະເທດຊາດທີ່ຢູ່ເທິງແຜ່ນດິນໂລກຈະບໍ່ຈິບຫາຍໄດ້ແນວໃດ? ບັນດາປະເທດຊາດທີ່ຢູ່ເທິງແຜ່ນດິນໂລກຈະບໍ່ລົ້ມສະຫຼາຍໄດ້ແນວໃດ? ປະຊາຊົນຂອງເຮົາຈະບໍ່ຮ້ອງໂຮໄດ້ແນວໃດ? ພວກເຂົາຈະບໍ່ຮ້ອງດ້ວຍຄວາມປິຕິຍິນດີໄດ້ແນວໃດ? ນີ້ແມ່ນພາລະກິດຂອງມະນຸດບໍ? ມັນເປັນການກະທຳດ້ວຍມືຂອງມະນຸດບໍ? ເຮົາປະທານແຫຼ່ງກຳເນີດແຫ່ງການເປັນຢູ່ຂອງມະນຸດ ແລະ ຈັດແຈງໃຫ້ເຂົາດ້ວຍວັດຖຸສິ່ງຂອງຕ່າງໆ ແຕ່ເຂົາກໍບໍ່ພໍໃຈກັບສະພາບການໃນປັດຈຸບັນຂອງເຂົາ ແລະ ຮຽກຮ້ອງໃຫ້ໄດ້ເຂົ້າສູ່ອານາຈັກຂອງເຮົາ. ແຕ່ເຂົາຈະເຂົ້າສູ່ອານາຈັກຂອງເຮົາຢ່າງງ່າຍດາຍ ໂດຍບໍ່ຕ້ອງຈ່າຍລາຄາ, ໂດຍບໍ່ເຕັມໃຈທີ່ຈະຖວາຍຄວາມອຸທິດຕົນຢ່າງບໍ່ເຫັນແກ່ຕົວໄດ້ແນວໃດ? ແທນທີ່ຈະຮຽກຮ້ອງສິ່ງໃດໜຶ່ງຈາກມະນຸດ, ເຮົາສ້າງເງື່ອນໄຂສຳລັບເຂົາ ເພື່ອວ່າອານາຈັກຂອງເຮົາທີ່ຢູ່ເທິງແຜ່ນດິນໂລກຈະເຕັມໄປດ້ວຍສະຫງ່າລາສີ. ມະນຸດຖືກເຮົານຳພາຈົນມາເຖິງຍຸກປັດຈຸບັນ, ເຂົາເປັນຢູ່ໃນສະພາບແບບນີ້ ແລະ ເຂົາດຳລົງຊີວິດຢູ່ທ່າມກາງການນຳພາໂດຍແສງສະຫວ່າງຂອງເຮົາ. ຖ້າມັນບໍ່ເປັນແບບນັ້ນ, ແມ່ນໃຜທ່າມກາງຜູ້ຄົນທີ່ຢູ່ເທິງແຜ່ນດິນໂລກຈະຮູ້ຈັກໂອກາດຂອງພວກເຂົາໄດ້? ຜູ້ໃດຈະເຂົ້າໃຈຄວາມປະສົງຂອງເຮົາ? ເຮົາເພີ່ມກົດບັນຍັດຂອງເຮົາເຂົ້າໃສ່ເງື່ອນໄຂຂອງມະນຸດ; ແລ້ວນີ້ບໍ່ແມ່ນສອດຄ່ອງກັບກົດເກນແຫ່ງທຳມະຊາດບໍ?

ມື້ວານນີ້ ເຈົ້າດຳລົງຊີວິດຢູ່ທ່າມກາງລົມ ແລະ ຝົນ; ມື້ນີ້ ເຈົ້າໄດ້ເຂົ້າສູ່ອານາຈັກຂອງເຮົາ ແລະ ກາຍເປັນປະຊາຊົນໃນອານາຈັກນັ້ນ ແລະ ມື້ອື່ນ ເຈົ້າຈະໄດ້ຮັບພອນຈາກເຮົາ. ຜູ້ໃດຈະຈິນຕະນາການເຖິງສິ່ງເຫຼົ່ານັ້ນໄດ້? ເຈົ້າຈະຜະເຊີນກັບຄວາມລຳບາກ ແລະ ຄວາມຫຍຸ້ງຍາກຫຼາຍສໍ່າໃດໃນຊີວິດຂອງເຈົ້າ, ພວກເຈົ້າຮູ້ບໍ? ເຮົາກ້າວໄປຂ້າງໜ້າທ່າມກາງລົມ ແລະ ຝົນ ແລະ ໄດ້ໃຊ້ເວລາປີແລ້ວປີເລົ່າທ່າມກາງມະນຸດຈົນເຖິງປັດຈຸບັນ. ສິ່ງເຫຼົ່ານີ້ບໍ່ແມ່ນບາດກ້າວໃນແຜນການຄຸ້ມຄອງຂອງເຮົາບໍ? ຜູ້ໃດເຄີຍເພີ່ມຫຍັງເຂົ້າໃນແຜນການຂອງເຮົາບໍ່? ຜູ້ໃດສາມາດໜີຈາກຂັ້ນຕອນຕ່າງໆທີ່ຢູ່ໃນແຜນການຂອງເຮົາບໍ່? ເຮົາດຳລົງຊີວິດຢູ່ໃນຫົວໃຈຂອງຫຼາຍຮ້ອຍລ້ານຄົນ, ເຮົາເປັນກະສັດທີ່ຢູ່ທ່າມກາງຫຼາຍຮ້ອຍລ້ານຄົນ ແລະ ເຮົາຖືກປະຕິເສດ ແລະ ຖືກໃສ່ຮ້າຍປ້າຍສີໂດຍຫຼາຍຮ້ອຍລ້ານຄົນ. ພາບລັກຂອງເຮົາບໍ່ໄດ້ຢູ່ພາຍໃນຫົວໃຈຂອງມະນຸດຢ່າງແທ້ຈິງເລີຍ. ມະນຸດພຽງແຕ່ຮັບຮູ້ໃບໜ້າແຫ່ງສະຫງ່າລາສີຂອງເຮົາທີ່ຢູ່ໃນພຣະທຳຂອງເຮົາຢ່າງມືດມົວ, ແຕ່ຍ້ອນມີການແຊກແຊງໃນຄວາມຄິດຂອງເຂົາ, ເຂົາ

ບໍ່ໄວ້ໃຈຄວາມຮູ້ສຶກຂອງເຂົາເອງ; ມີພຽງແຕ່ເຮົາໃນຮູບພາບເລື່ອນລອຍຝັງຢູ່ໃນຫົວໃຈຂອງເຂົາ, ແຕ່ມັນຈະບໍ່ຄົງຢູ່ແບບນັ້ນຕະຫຼອດໄປ. ດ້ວຍເຫດນັ້ນ ຄວາມຮັກທີ່ເຂົາມີສໍາລັບເຮົາຈຶ່ງເປັນດັ່ງນີ້: ຄວາມຮັກຂອງເຂົາທີ່ຢູ່ຕໍ່ໜ້າເຮົາເບິ່ງຄືກັບວ່າບໍ່ໝັ້ນຄົງ, ຄືກັບວ່າມະນຸດແຕ່ລະຄົນຮັກເຮົາຕາມອາລົມຂອງເຂົາເອງ, ຄືກັບວ່າຄວາມຮັກຂອງເຂົາໄດ້ກະພິບເຂົ້າ ແລະ ອອກຈາກສາຍຕາພາຍໃຕ້ແສງເດືອນທີ່ມືດມົວ. ໃນປັດຈຸບັນ, ມັນເປັນພຽງຍ້ອນຄວາມຮັກຂອງເຮົາທີ່ເຮັດໃຫ້ມະນຸດຄົງຢູ່ ແລະ ມີໂອກາດທີ່ຈະຢູ່ລອດ. ຖ້າມັນບໍ່ເປັນແບບນັ້ນ, ຜູ້ໃດທ່າມກາງມະນຸດຈະບໍ່ຖືກຕັດຂາດໂດຍເລເຊີ ຍ້ອນຮ່າງກາຍທີ່ຈ່ອຍເຫຼືອງຂອງພວກເຂົາ? ມະນຸດຍັງບໍ່ຮູ້ຈັກຕົນເອງ. ເຂົາໂອ້ອວດຕໍ່ໜ້າເຮົາ ແລະ ເວົ້າໂອ້ອວດຢູ່ລັບຫຼັງເຮົາ, ແຕ່ບໍ່ມີໃຜກ້າ "ຕໍ່ຕ້ານ" ເຮົາ ເມື່ອຢູ່ຕໍ່ໜ້າເຮົາ. ເຖິງຢ່າງໃດກໍຕາມ, ມະນຸດບໍ່ຮູ້ຈັກຄວາມໝາຍຂອງການຕໍ່ຕ້ານທີ່ເຮົາກ່າວເຖິງ; ກົງກັນຂ້າມ ເຂົາສືບຕໍ່ພະຍາຍາມລໍ້ລວງເຮົາ ແລະ ສືບຕໍ່ຍົກຍ້ອງເຂົາເອງໃນເລື່ອງນີ້, ເຂົາບໍ່ໄດ້ຕໍ່ຕ້ານເຮົາຢ່າງເປີດເຜີຍບໍ? ເຮົາອົດກັ້ນຕໍ່ຄວາມອ່ອນແອຂອງມະນຸດ, ແຕ່ເຮົາບໍ່ຜ່ອນຜັນແມ່ນແຕ່ໜ້ອຍດຽວກັບການຕໍ່ຕ້ານທີ່ເຂົາເປັນຜູ້ສ້າງຂຶ້ນເອງ. ເຖິງແມ່ນເຂົາຮູ້ຈັກຄວາມໝາຍຂອງມັນ, ເຂົາກໍບໍ່ເຕັມໃຈທີ່ຈະປະຕິບັດຕາມຄວາມໝາຍນີ້ ແລະ ພຽງແຕ່ເຮັດຕາມຄວາມມັກຂອງເຂົາ ໂດຍຫຼອກລວງເຮົາ. ເຮົາສະແດງອຸປະນິໄສຂອງເຮົາຢ່າງຊັດເຈນຢູ່ໃນພຣະທໍາຂອງເຮົາຕະຫຼອດເວລາ, ແຕ່ມະນຸດກໍບໍ່ຍອມຮັບໃນຄວາມພ່າຍແພ້, ໃນເວລາດຽວກັນ ເຂົາໄດ້ເປີດເຜີຍອຸປະນິໄສຂອງເຂົາ. ໃນທ່າມກາງການພິພາກສາຂອງເຮົາ ມະນຸດຈະເຊື່ອຢ່າງແທ້ຈິງ ແລະ ໃນທ່າມກາງການຂ້ຽນຕີຂອງເຮົາ, ເຂົາຈະດໍາລົງຊີວິດຕາມພາບລັກຂອງເຮົາໃນທີ່ສຸດ ແລະ ກາຍມາເປັນການສະແດງອອກຂອງເຮົາຢູ່ເທິງແຜ່ນດິນໂລກ!

ວັນທີ 22 ມີນາ 1992

# ບົດທີ 23

ເມື່ອສຽງຂອງເຮົາດັງຂຶ້ນ, ເມື່ອຕາຂອງເຮົາພົ່ນໄຟອອກມາ, ເຮົາກຳລັງເຝົ້າເບິ່ງຢູ່ເໜືອໂລກທັງປວງ, ເຮົາກຳລັງສັງເກດຈັກກະວານທັງປວງ. ມະນຸດທຸກຄົນກຳລັງອະທິຖານຫາເຮົາ, ຫຼຽວມາຈ້ອງເບິ່ງເຮົາ, ອ້ອນວອນເຮົາໃຫ້ຢຸດຄວາມໃຈຮ້າຍຂອງເຮົາ ແລະ ສາບານທີ່ຈະບໍ່ກະບົດຕໍ່ເຮົາອີກຕໍ່ໄປ. ແຕ່ນີ້ບໍ່ແມ່ນອະດີດອີກຕໍ່ໄປ; ມັນຄືປັດຈຸບັນ. ຜູ້ໃດສາມາດມອບຄືນຄວາມປະສົງຂອງເຮົາ? ແນ່ນອນມັນບໍ່ແມ່ນການພາວະນາທີ່ຢູ່ພາຍໃນຫົວໃຈຂອງມະນຸດ ຫຼື ຄຳເວົ້າທີ່ຢູ່ໃນປາກຂອງພວກເຂົາບໍ? ຜູ້ໃດສາມາດຢູ່ລອດຈົນເຖິງປັດຈຸບັນ ຖ້າບໍ່ແມ່ນຍ້ອນເຮົາ? ຜູ້ໃດຢູ່ລອດໄດ້ ໂດຍບໍ່ມີພຣະທຳທີ່ຢູ່ໃນປາກເຮົາ? ຜູ້ໃດບໍ່ ຖືກສາຍຕາຂອງເຮົາເຝົ້າເບິ່ງ? ເຮົາປະຕິບັດພາລະກິດໃໝ່ຂອງເຮົາເທິງແຜ່ນດິນໂລກທັງປວງ, ແລ້ວຜູ້ໃດສາມາດຫຼົບໜີຈາກພາລະກິດນັ້ນໄດ້? ພູເຂົາຕ່າງໆສາມາດຫຼີກເວັ້ນພາລະກິດນັ້ນ ດ້ວຍຄວາມສູງຂອງພວກມັນໄດ້? ດ້ວຍຄວາມກວ້າງໃຫຍ່ໄພສານຂອງມັນ ນໍ້າກໍສາມາດປ້ອງກັນພາລະກິດນັ້ນໄດ້? ໃນແຜນການຂອງເຮົາ, ເຮົາບໍ່ເຄີຍປ່ອຍໃຫ້ສິ່ງໃດກໍຕາມຜ່ານໄປຢ່າງງ່າຍດາຍ ແລະ ສະນັ້ນຈຶ່ງບໍ່ເຄີຍມີໃຜ ຫຼື ສິ່ງໃດທີ່ໜີພົ້ນກຳມືຂອງເຮົາ. ໃນປັດຈຸບັນ, ນາມອັນບໍລິສຸດຂອງເຮົາເປັນທີ່ຍົກຍ້ອງໃນບັນດາມະນຸດ ແລະ ອີກຄັ້ງ ຂ່າວແຫ່ງການປະທ້ວງຕໍ່ເຮົາກໍເກີດຂຶ້ນໃນບັນດາມະນຸດ ແລະ ເລື່ອງເລົ່າລືກ່ຽວກັບການທີ່ເຮົາຢູ່ເທິງແຜ່ນດິນໂລກກໍມີຢູ່ທົ່ວໄປໃນບັນດາມະນຸດ. ເຮົາບໍ່ທົນຕໍ່ການທີ່ມະນຸດຕັດສິນເຮົາ ຫຼື ເຮົາບໍ່ທົນຕໍ່ການທີ່ພວກເຂົາແຍກຮ່າງກາຍຂອງເຮົາອອກແລ້ວແຮງໄກທີ່ເຮົາຈະທົນຕໍ່ຄຳປ້ອຍດ່າທີ່ພວກເຂົາໃຊ້ກັບເຮົາ. ເພາະເຂົາບໍ່ເຄີຍຮູ້ຈັກເຮົາຢ່າງແທ້ຈິງ, ມະນຸດຈຶ່ງຕໍ່ຕ້ານ ແລະ ຫຼອກລວງເຮົາຢູ່ສະເໝີ, ບໍ່ສາມາດຊື່ນຊົມພຣະວິນຍານຂອງເຮົາ ຫຼື ເຊີດຊູພຣະທຳຂອງເຮົາ. ສຳລັບການກະທຳ ແລະ ການປະພຶດທຸກຢ່າງຂອງເຂົາ ແລະ ສຳລັບທັດສະນະຄະຕິທີ່ເຂົາມີຕໍ່ເຮົາ, ເຮົາມອບ “ລາງວັນ” ໃຫ້ກັບມະນຸດ ເຊິ່ງເປັນສິ່ງທີ່ເຂົາຄວນຈະໄດ້ຮັບ. ດ້ວຍເຫດນັ້ນມະນຸດທຸກຄົນຈຶ່ງປະຕິບັດໂດຍແນສາຍຕາໄປທີ່ລາງວັນຂອງພວກເຂົາ ແລະ ບໍ່ມີແມ່ນແຕ່ຄົນດຽວທີ່ໄດ້ປະຕິບັດພາລະກິດດ້ວຍການເສຍສະຫຼະຕົນເອງ. ມະນຸດບໍ່ເຕັມໃຈທີ່ຈະມອບການອຸທິດຢ່າງບໍ່ເຫັນແກ່ຕົວ, ແຕ່ກົງກັນຂ້າມ ພວກເຂົາຍິນດີກັບລາງວັນທີ່ພວກເຂົາໄດ້ຮັບ ໂດຍບໍ່ຕ້ອງເຮັດຫຍັງເລີຍ. ເຖິງແມ່ນເປໂຕອຸທິດຕົນເອງຕໍ່ໜ້າເຮົາ, ນັ້ນກໍບໍ່ແມ່ນເພື່ອເຫັນແກ່ລາງວັນໃນອະນາຄົດ, ແຕ່ເພື່ອເຫັນແກ່ຄວາມຮູ້ໃນປັດຈຸບັນ. ມະນຸດບໍ່ເຄີຍສື່ສານກັບເຮົາຢ່າງແທ້ຈິງ, ແຕ່ຄັ້ງແລ້ວຄັ້ງເລົ່າ ພວກເຂົາໄດ້ປະຕິບັດກັບເຮົາດ້ວຍວິທີການຕື້ນໆ ໂດຍຄິດວ່າ ບໍ່ຕ້ອງມີຄວາມພະຍາຍາມຫຍັງເລີຍ ເພື່ອຮັບເອົາຄວາມເຫັນດີຂອງເຮົາ. ເຮົາເບິ່ງເລິກລົງໄປໃນຫົວໃຈຂອງມະນຸດ, ແລ້ວເຮົາກໍໄດ້ຂຸດພົບຂຸມເລິກທີ່ສຸດ ເຊິ່ງເປັນ “ບໍ່ແຮ່ແຫ່ງຄວາມອຸດົມຮັ່ງມີຫຼາຍປະການ”, ເປັນສິ່ງທີ່ແມ່ນແຕ່ມະນຸດເອງກໍຍັງບໍ່ຮູ້ແຕ່ເປັນສິ່ງທີ່ເຮົາຄົ້ນພົບໃໝ່. ດ້ວຍເຫດນັ້ນ ມີແຕ່ເມື່ອພວກເຂົາໄດ້ເຫັນເຖິງ “ຫຼັກຖານທາງວັດຖຸ”, ມະນຸດຈຶ່ງຈະຍອມຮັບຜິດໃນການອະນົງຕົວ ແລະ ແບມືຍອມຮັບກັບສະພາບທີ່ສົກກະປົກຂອງພວກເຂົາເອງ. ໃນບັນດາມະນຸດ, ຍັງມີຫຼາຍສິ່ງອີກທີ່ໃໝ່ເຊິ່ງລໍຖ້າໃຫ້ເຮົາ “ແກະມັນອອກ” ເພື່ອ

ຄວາມສຸກຂອງມະນຸດທັງປວງ. ແທນທີ່ຈະຢຸດພາລະກິດຂອງເຮົາເນື່ອງຈາກຄວາມໄຮ້ສາມາດຂອງມະນຸດ, ເຮົາລິຮານເຂົ້າຕາມແຜນການເດີມຂອງເຮົາ. ມະນຸດເປັນຄືກັນກັບຕົ້ນໄມ້ເກີດໝາກ: ຫາກປາສະຈາກການຮານ, ຕົ້ນໄມ້ກໍຈະບໍ່ສາມາດເກີດໝາກໄດ້ ແລະ ໃນທີ່ສຸດ ສິ່ງທີ່ເຫັນກໍຄືງ່າໄມ້ແຫ່ວແຫ້ງ, ບໍ່ມີໃບ ແລະ ບໍ່ມີໝາກໃຫ້ຕົກລົງສູ່ພື້ນດິນ.

ເມື່ອເຮົາຕົບແຕ່ງ "ດ້ານໃນ" ຂອງອານາຈັກຂອງເຮົາແຕ່ລະມື້, ບໍ່ມີໃຜໂຜ່ເຂົ້າໄປໃນ "ຫ້ອງເຮັດວຽກ" ຂອງເຮົາຢ່າງທັນທີເພື່ອລົບກວນພາລະກິດຂອງເຮົາ. ທຸກຄົນກຳລັງເຮັດສຸດຄວາມພະຍາຍາມຂອງພວກເຂົາເພື່ອຮ່ວມມືກັບເຮົາ ໂດຍຢ້ານຫຼາຍທີ່ຈະຖືກ "ໄລ່ອອກ" ແລະ "ສູນເສຍຕຳແໜ່ງຂອງພວກເຂົາ" ແລະ ໃນທີ່ສຸດ ກໍໄປເຖິງທາງຕັນໃນຊີວິດຂອງພວກເຂົາ ເຊິ່ງເປັນບ່ອນທີ່ພວກເຂົາຍິ່ງຈະຕົກລົງສູ່ "ທະເລຊາຍ" ທີ່ຊາຕານໄດ້ຄອບຄອງ. ຍ້ອນຄວາມຢ້ານກົວຂອງມະນຸດ, ເຮົາປອບໃຈເຂົາທຸກມື້, ດົນໃຈໃຫ້ຮັກທຸກມື້ ແລະ ຍິ່ງໄປກວ່ານັ້ນກໍຄືມອບຄຳແນະນຳໃຫ້ກັບເຂົາທ່າມກາງຊີວິດປະຈຳວັນຂອງເຂົາ. ມັນເປັນຄືກັບວ່າ ມະນຸດເປັນທາລົກທັງໝົດທີ່ຫາກໍ່ເກີດ; ຖ້າບໍ່ຈັດຫານົມໃຫ້, ພວກເຂົາຈະຈາກໂລກນີ້ໄປໃນອີກບໍ່ດົນ, ຈະບໍ່ເຫັນອີກຕໍ່ໄປ. ທ່າມກາງການອ້ອນວອນຂອງມະນຸດ, ເຮົາເຂົ້າມາໃນໂລກຂອງມະນຸດ ແລະ ໂດຍບໍ່ຊັກຊ້າ ມະນຸດດຳລົງຊີວິດຢູ່ໃນໂລກແຫ່ງແສງສະຫວ່າງ, ບໍ່ຖືກຂັງໄວ້ໃນ "ຫ້ອງ" ທີ່ພວກເຂົາຮ້ອງໄຫ້ອະທິຖານຫາສະຫວັນອີກຕໍ່ໄປ. ທັນທີທີ່ພວກເຂົາເຫັນເຮົາ, ມະນຸດກໍຮ້ອງໄຫ້ກັບ "ຄວາມທຸກໃຈ" ທີ່ເກັບໄວ້ໃນຫົວໃຈຂອງພວກເຂົາຊໍ້າແລ້ວຊໍ້າອີກ, ເປີດປາກຂອງພວກເຂົາຕໍ່ໜ້າເຮົາເພື່ອຂໍໃຫ້ຖິ້ມອາຫານນັ້ນລົງມາຍັງພວກເຂົາ. ຫຼັງຈາກນັ້ນ "ຄວາມຢ້ານຂອງພວກເຂົາກໍຖືກບັນເທົາ ແລະ ຈິດໃຈກໍກັບຄືນສູ່ສະພາບເດີມ", ພວກເຂົາບໍ່ຂໍຫຍັງຈາກເຮົາອີກຕໍ່ໄປ, ແຕ່ນອນຫຼັບເປັນປົກກະຕິ ຫຼື ບໍ່ດັ່ງນັ້ນ ກໍປະຕິເສດການເປັນຢູ່ຂອງເຮົາ, ພວກເຂົາມີແຕ່ສົນໃຈກັບວຽກການຂອງພວກເຂົາເອງ. ໃນ "ການປະຖິ້ມ" ຂອງມະນຸດຊາດ, ມັນພິສູດໃຫ້ເຫັນຢ່າງຊັດເຈນແລ້ວວ່າ ມະນຸດທີ່ປາສະຈາກ "ຄວາມຮູ້ສຶກ" ປະຕິບັດ "ຄວາມຍຸຕິທຳທີ່ບໍ່ລຳອຽງ" ຂອງພວກເຂົາຕໍ່ເຮົາແນວໃດ. ສະນັ້ນ ເມື່ອເຫັນມະນຸດໃນລັກສະນະທີ່ບໍ່ເປັນຕາຮັກຂອງເຂົາ, ເຮົາກໍຈາກໄປຢ່າງງຽບໆ ແລະ ຈະບໍ່ລົງມາອີກຄັ້ງໂດຍທັນທີຕາມການອ້ອນວອນຢ່າງຈິງຈັງຂອງເຂົາ. ໂດຍທີ່ເຂົາບໍ່ຮູ້ຕົວ ບັນຫາຂອງມະນຸດແມ່ນຮ້າຍແຮງຂຶ້ນໃນແຕ່ລະມື້ ແລະ ສະນັ້ນ ໃນທ່າມກາງການເຮັດວຽກໜັກຂອງເຂົາເມື່ອເຂົາຄົ້ນພົບການເປັນຢູ່ຂອງເຮົາຢ່າງທັນທີ, ເຂົາປະຕິເສດທີ່ຈະຮັບເອົາຄຳວ່າ "ບໍ່" ເປັນຄຳຕອບ ແລະ ເຂົາຈັບຄໍເສື້ອເຮົາ ແລະ ພາເຮົາເຂົ້າໄປໃນເຮືອນຂອງເຂົາໃນຖານະແຂກ. ແຕ່ເຖິງແມ່ນເຂົາຈັດກຽມອາຫານຢ່າງຫຼູຫຼາເພື່ອຄວາມສຸກຂອງເຮົາ, ເຂົາກໍບໍ່ເຄີຍພິຈາລະນາໃຫ້ເຮົາເປັນພວກດຽວກັບເຂົາຈັກເທື່ອ, ກົງກັນຂ້າມ ເຂົາປະຕິບັດຕໍ່ເຮົາດັ່ງແຂກເພື່ອຮັບເອົາຄວາມຊ່ວຍເຫຼືອຈຳນວນເລັກນ້ອຍຈາກເຮົາ. ສະນັ້ນ ໃນເວລານີ້, ມະນຸດສະແດງສະພາບໂສກເສົ້າເສຍໃຈຂອງເຂົາຕໍ່ໜ້າເຮົາຢ່າງບໍ່ເປັນທາງການ, ຫວັງທີ່ຈະຮັບເອົາ "ລາຍເຊັນ" ຂອງເຮົາ ຄືດັ່ງຄົນທີ່ຕ້ອງການເງິນກູ້ສຳລັບທຸລະກິດຂອງເຂົາ, ເຂົາຈຶ່ງພະຍາຍາມ "ຄວ້າເອົາ" ເຮົາດ້ວຍກຳລັງທັງໝົດຂອງເຂົາ. ໃນທ່າທາງ ແລະ ການເຄື່ອນໄຫວທຸກຢ່າງຂອງເຂົາ, ພຽງໄລຍະສັ້ນໆເຮົາກໍສາມາດເຫັນເຈດຕະນາຂອງມະນຸດ:

ມັນເປັນຄືກັບວ່າ ໃນມຸມມອງຂອງເຂົາ ເຮົາບໍ່ຮູ້ຈັກວິທີອ່ານຄວາມໝາຍທີ່ເຊື່ອງຊ້ອນຢູ່ໃນສີໜ້າຂອງບຸກຄົນໃດໜຶ່ງ ຫຼື ຄວາມໝາຍທີ່ແຝງຢູ່ໃນຄຳເວົ້າຂອງເຂົາ ຫຼື ວິທີເບິ່ງລົງເລິກເຂົ້າໄປໃນຫົວໃຈຂອງບຸກຄົນໃດໜຶ່ງ. ດ້ວຍເຫດນັ້ນ ມະນຸດຈຶ່ງໝັ້ນໃຈໃນໂຕເຮົາໃນທຸກປະສົບການທຸກຢ່າງທີ່ເຂົາພົບພໍ້ໃນທຸກເຫດການ ໂດຍບໍ່ມີຄວາມຜິດພາດ ຫຼື ການລະເວັ້ນ ແລະ ຫຼັງຈາກນັ້ນກໍຕັ້ງຂໍ້ຮຽກຮ້ອງຂອງເຂົາຕໍ່ໜ້າເຮົາ. ເຮົາລັງກຽດ ແລະ ກຽດຊັງການກະທຳ ແລະ ການປະພຶດທຸກຢ່າງຂອງມະນຸດ. ທ່າມກາງມະນຸດ, ບໍ່ເຄີຍມີແມ່ນແຕ່ຄົນດຽວທີ່ໄດ້ປະຕິບັດພາລະກິດທີ່ເຮົາຮັກ ຄືກັບວ່າມະນຸດຕັ້ງໃຈເປັນສັດຕູກັບເຮົາ ແລະ ມີເປົ້າໝາຍທີ່ຈະດຶງດູດຄວາມໂກດຮ້າຍຂອງເຮົາ: ພວກເຂົາລ້ວນແລ້ວແຕ່ແຫ່ຂະບວນໄປມາຢູ່ຕໍ່ໜ້າເຮົາ, ເຮັດຕາມຄວາມປະສົງຂອງພວກເຂົາເອງຢູ່ຕໍ່ໜ້າຕໍ່ຕາເຮົາ. ບໍ່ມີແມ່ນແຕ່ຄົນດຽວທ່າມກາງມະນຸດທີ່ດຳລົງຊີວິດຢູ່ເພື່ອເຫັນແກ່ເຮົາ ແລະ ຜົນຕາມມາກໍຄື ການເປັນຢູ່ຂອງມະນຸດຊາດບໍ່ມີຄຸນຄ່າ ຫຼື ບໍ່ມີຄວາມໝາຍ, ອັນເຮັດໃຫ້ມະນຸດດຳລົງຊີວິດຢູ່ໃນຄວາມວ່າງເປົ່າ. ເຖິງຢ່າງນັ້ນກໍຕາມ ມະນຸດຍັງປະຕິເສດທີ່ຈະຕື່ນຂຶ້ນ, ແຕ່ສືບຕໍ່ເປັນກະບົດກັບເຮົາ, ສືບຕໍ່ໃນຄວາມທະນົງຕົວຂອງເຂົາ.

ໃນບັນດາການທົດລອງທີ່ພວກເຂົາໄດ້ຜ່ານພົ້ນ, ມະນຸດບໍ່ເຄີຍເຮັດຫຍັງທີ່ພໍໃຈເຮົາຈັກເທື່ອ. ຍ້ອນຄວາມຊົ່ວຮ້າຍທີ່ໂຫດຮ້າຍຂອງພວກເຂົາ, ມະນຸດຊາດບໍ່ຕັ້ງໃຈທີ່ຈະເປັນພະຍານໃຫ້ກັບພຣະນາມຂອງເຮົາ; ກົງກັນຂ້າມ ພວກເຂົາ “ແລ່ນໄປທາງອື່ນ” ໃນຂະນະທີ່ເພິ່ງພາເຮົາສຳລັບການບຳລຸງຊີບ. ຫົວໃຈຂອງມະນຸດບໍ່ຫັນເຂົ້າຫາເຮົາທັງໝົດ ແລະ ສະນັ້ນ ຊາຕານຈຶ່ງສ້າງຄວາມເສຍຫາຍແກ່ເຂົາຈົນເຂົາເຕັມໄປດ້ວຍຮອຍບາດແຜຢ່າງໜັກ, ຮ່າງກາຍຂອງເຂົາຄຸມໄປດ້ວຍຄວາມສົກກະປົກ. ແຕ່ມະນຸດຍັງບໍ່ເຂົ້າໃຈວ່າ ສີໜ້າຂອງເຂົາເປັນຕາເບື່ອໜ່າຍຫຼາຍສໍ່າໃດ. ຕະຫຼອດມາ ເຂົາຍັງກາບໄຫວ້ຊາຕານເມື່ອຢູ່ລັບຫຼັງເຮົາ. ຍ້ອນເຫດຜົນນີ້, ເຮົາຈຶ່ງໂຍນມະນຸດລົງສູ່ຂຸມເລິກທີ່ສຸດດ້ວຍຄວາມໂມໂຫ, ເຮັດແບບນັ້ນກໍເພື່ອວ່າ ເຂົາຈະບໍ່ສາມາດປົດປ່ອຍຕົນເອງໃຫ້ເປັນອິດສະຫຼະອີກຕໍ່ໄປ. ເຖິງຢ່າງນັ້ນກໍຕາມໃນທ່າມກາງສຽງຮ້ອງໄຫ້ທີ່ເປັນຕາໜ້າສົງສານຂອງເຂົາ, ມະນຸດຍັງປະຕິເສດທີ່ຈະປ່ຽນແປງຄວາມຄິດຂອງເຂົາ, ຕັ້ງໃຈທີ່ຈະຕໍ່ຕ້ານເຮົາຈົນເຖິງຈຸດຈົບຢ່າງຂົມຂື່ນ ແລະ ຫວັງຢ່າງດື້ດ້ານເພື່ອຈະກໍ່ກວນຄວາມໂມໂຫຂອງເຮົາ. ເນື່ອງຈາກສິ່ງທີ່ເຂົາໄດ້ເຮັດ, ເຮົາປະຕິບັດຕໍ່ເຂົາດັ່ງຄົນບາບ ແລະ ປະຕິເສດທີ່ຈະໃຫ້ຄວາມອົບອຸ່ນແຫ່ງອ້ອມກອດຂອງເຮົາໃຫ້ກັບເຂົາ. ຕັ້ງແຕ່ຕອນທຳອິດ, ທູດສະຫວັນໄດ້ຮັບໃຊ້ເຮົາ ແລະ ເຊື່ອຟັງເຮົາ ໂດຍບໍ່ປ່ຽນແປງ ຫຼື ຍົກເລີກ, ແຕ່ມະນຸດເຮັດກົງກັນຂ້າມສະເໝີ ຄືກັນກັບວ່າເຂົາບໍ່ໄດ້ມາຈາກເຮົາ, ແຕ່ເກີດມາຈາກຊາຕານ. ທູດສະຫວັນໃນຕຳແໜ່ງຂອງໃຜລາວລ້ວນແລ້ວແຕ່ອຸທິດຕົນໃຫ້ກັບເຮົາຢ່າງທີ່ສຸດ; ພວກເຂົາບໍ່ແກວ່ງໄກວໂດຍກຳລັງຂອງຊາຕານ ແລະ ພຽງແຕ່ປະຕິບັດໜ້າທີ່ຂອງພວກເຂົາ. ເມື່ອໄດ້ດູດນໍ້ານົມ ແລະ ຖືກບຳລຸງລ້ຽງດ້ວຍທູດສະຫວັນ, ລູກຊາຍຂອງເຮົາທັງຫຼາຍ ແລະ ປະຊາຊົນຂອງເຮົາລ້ວນແລ້ວແຕ່ເຂັ້ມແຂງ ແລະ ມີສຸຂະພາບດີ, ບໍ່ມີແມ່ນແຕ່ຄົນດຽວໃນບັນດາພວກເຂົາທີ່ອ່ອນແອ ຫຼື ອ່ອນກຳລັງ. ນີ້ແມ່ນການກະທຳຂອງເຮົາ ແລະ ການອັດສະຈັນຂອງເຮົາ. ການລະດົມຍິງປືນໃຫຍ່ຄັ້ງແລ້ວຄັ້ງເລົ່າ ແມ່ນເລີ່ມສະຫຼອງການສ້າງຕັ້ງອານາຈັກຂອງເຮົາ, ທູດ

ສະຫວັນຢ່າງເປັນຈັງຫວະດົນຕີ ແລ້ວມາຢູ່ຕໍ່ໜ້າແທ່ນຂອງເຮົາເພື່ອຍອມຕໍ່ການກວດສອບຂອງເຮົາ, ເພາະຫົວໃຈຂອງພວກເຂົາແມ່ນປາສະຈາກຄວາມບໍ່ບໍລິສຸດ ແລະ ພະທຽມ ແລະ ພວກເຂົາບໍ່ຫຼີກເວັ້ນການກວດສອບຂອງເຮົາ.

ເມື່ອສຽງລົມພາຍຸພັດມາຢ່າງແຮງ, ສະຫວັນກໍດັບລົງມາທັນທີ, ເຮັດໃຫ້ມະນຸດທຸກຄົນຫາຍໃຈບໍ່ອອກ ເພື່ອວ່າພວກເຂົາຈະບໍ່ສາມາດເອີ້ນຫາເຮົາຕາມທີ່ພວກເຂົາຕ້ອງການໄດ້ອີກຕໍ່ໄປ. ມະນຸດທຸກຄົນລົ້ມສະຫຼາຍໂດຍບໍ່ຮູ້ຈັກຕົວເລີຍ. ຕົ້ນໄມ້ແກວ່ງໄກວໄປມາໃນສາຍລົມ, ໄດ້ຍິນສຽງງ່າໄມ້ຫັກຄັ້ງແລ້ວຄັ້ງເລົ່າ ແລະ ໃບໄມ້ແຫ່ວແຫ້ງຖືກປັດເປົ່າໄປໝົດ. ທັນທີໃດ ໂລກກໍຮູ້ສຶກເປົ່າປ່ຽວ ແລະ ໂດດດ່ຽວດຽວດາຍ ແລະ ຜູ້ຄົນກອດຕົນເອງຢ່າງແໜ້ນ ເພື່ອກຽມພ້ອມສຳລັບໄພພິບັດທີ່ເກີດຂຶ້ນລະດູໃບໄມ້ຫຼົ່ນ ທີ່ຈະຟາດໃສ່ພວກເຂົາໄດ້ທຸກເມື່ອ. ນົກທີ່ຢູ່ເທິງພູເຂົາບິນໄປພຸ້ນໄປພີ້ ຄືກັບວ່າຮ້ອງໄຫ້ດ້ວຍຄວາມໂສກເສົ້າໃຫ້ກັບບາງຄົນ; ໃນຖໍ້າພູເຂົາ, ສິງໂຕແຜດສຽງດັງສະນັ້ນ ເຮັດໃຫ້ຜູ້ຄົນຢ້ານກົວດ້ວຍສຽງຈົນໄຂມັນກະດູກຂອງພວກເຂົາແຂງກະດ້າງ, ຢ້ານກົວຈົນຂົນລຸກ ແລະ ເບິ່ງຄືກັບວ່າມີຄວາມຮູ້ສຶກມີລາງຮ້າຍທີ່ສັນຍານບອກເຖິງຈຸດຈົບຂອງມະນຸດຊາດ. ຍ້ອນບໍ່ເຕັມໃຈທີ່ຈະລໍຖ້າຄວາມພໍໃຈຂອງເຮົາໃນການກຳຈັດພວກເຂົາ, ມະນຸດທຸກຄົນອະທິຖານຢ່າງງຽບໆຫາພຣະຜູ້ເປັນເຈົ້າທີ່ມີອຳນາດສູງສຸດຢູ່ໃນສະຫວັນ. ແຕ່ລົມພາຍຸຈະຖືກຂັດຂວາງໂດຍສຽງຟົດນັບຂອງນໍ້າທີ່ຫລັ່ງໄຫຼໃນຫ້ວຍນ້ອຍໄດ້ແນວໃດ? ຢູ່ດີໆ ມັນຈະຖືກເຮັດໃຫ້ຢຸດໂດຍສຽງແຫ່ງການພາວະນາຂອງມະນຸດໄດ້ແນວໃດ? ຄວາມໂມໂຫໃນຫົວໃຈຂອງສຽງຟ້າຮ້ອງຈະຖືກເຮັດໃຫ້ງຽບສະຫງົບໂດຍເຫັນແກ່ຄວາມຂີ້ອາຍຂອງມະນຸດໄດ້ແນວໃດ? ມະນຸດແກວ່ງໄກວໄປມາໃນສາຍລົມ; ເຂົາແລ່ນໄປພຸ້ນໄປພີ້ເພື່ອເຊື່ອງຕົນເອງຈາກຝົນ; ແລະ ທ່າມກາງຄວາມໂມໂຫຂອງເຮົາ, ມະນຸດສັ່ນ ແລະ ເຊັນ, ຢ້ານຢ່າງໜັກວ່າ ເຮົາຈະວາງມືຂອງເຮົາລົງເທິງຮ່າງກາຍຂອງພວກເຂົາ ຄືກັນກັບວ່າເຮົາເປັນປາກກະບອກປືນທີ່ຊີ້ໄປທີ່ໜ້າເອິກຂອງມະນຸດຢູ່ສະເໝີ ແລະ ອີກຄັ້ງ ຄືກັນກັບວ່າເຂົາເປັນສັດຕູຂອງເຮົາ ແລະ ເຂົາຍັງເປັນເພື່ອນຂອງເຮົາ. ມະນຸດບໍ່ເຄີຍຄົ້ນພົບເຈດຕະນາອັນແທ້ຈິງທີ່ເຮົາທີ່ມີຕໍ່ເຂົາ, ບໍ່ເຄີຍເຂົ້າໃຈຈຸດປະສົງທີ່ແທ້ຈິງຂອງເຮົາ ແລະ ດ້ວຍເຫດນັ້ນ ເຂົາຈຶ່ງລ່ວງເກີນເຮົາໂດຍບໍ່ຮູ້ຕົວ; ເຂົາຈຶ່ງຕໍ່ຕ້ານເຮົາຢ່າງບໍ່ຮູ້ຕົວ ແລະ ເຖິງຢ່າງໃດກໍຕາມ ເຂົາຍັງໄດ້ເຫັນເຖິງຄວາມຮັກຂອງເຮົາໂດຍບໍ່ໄດ້ຕັ້ງໃຈເຫັນ. ມັນຍາກສຳລັບມະນຸດທີ່ຈະໄດ້ເຫັນໃບໜ້າຂອງເຮົາໃນທ່າມກາງຄວາມໂມໂຫຂອງເຮົາ. ເຮົາລີ້ລັບໃນກ້ອນເມກສີດຳແຫ່ງຄວາມໃຈຮ້າຍຂອງເຮົາ ແລະ ເຮົາຢືນຢູ່ທ່າມກາງສຽງຟ້າຮ້ອງ, ເໜືອຈັກກະວານທັງປວງເພື່ອສົ່ງມອບຄວາມເມດຕາຂອງເຮົາລົງມາສູ່ມະນຸດ. ເພາະມະນຸດບໍ່ຮູ້ຈັກເຮົາ, ເຮົາບໍ່ຂ້ຽນຕີເຂົາຍ້ອນເຂົາບໍ່ສາມາດເຂົ້າໃຈເຈດຕະນາຂອງເຮົາ. ໃນສາຍຕາຂອງມະນຸດ, ເຮົາຈົ່ມວ່າກັບຄວາມໂມໂຫຂອງເຮົາຄັ້ງແລ້ວຄັ້ງເລົ່າ, ເຮົາສະແດງຮອຍຍິ້ມຂອງເຮົາຄັ້ງແລ້ວຄັ້ງເລົ່າ, ແຕ່ເຖິງແມ່ນເຂົາເຫັນເຮົາ, ມະນຸດກໍບໍ່ເຄີຍເຫັນອຸປະນິໄສທັງໝົດຂອງເຮົາຢ່າງແທ້ຈິງຈັກເທື່ອ ແລະ ຍັງບໍ່ສາມາດໄດ້ຍິນສຽງແກທີ່ກຶກກ້ອງຢ່າງມ່ວນຫູ, ເພາະວ່າເຂົາໄດ້ເລີ່ມຕາຍດ້ານ ແລະ ໄຮ້ຄວາມຮູ້ສຶກ. ມັນເປັນຄືກັບວ່າພາບຫຼັກຂອງເຮົາມີຢູ່ໃນຄວາມຊົງຈຳຂອງມະນຸດ ແລະ ຮູບຮ່າງຂອງເຮົາຢູ່ໃນຄວາມຄິດຂອງເຂົາ. ເຖິງຢ່າງໃດກໍຕາມ,

ຜ່ານຄວາມກ້າວໜ້າຂອງມະນຸດມາຈົນຮອດປັດຈຸບັນນີ້, ບໍ່ເຄີຍມີແມ່ນແຕ່ຄົນດຽວທີ່ໄດ້ເຫັນເຮົາຢ່າງແທ້ຈິງ ເພາະສະໝອງຂອງມະນຸດຂາດເຂີນຫຼາຍເກີນໄປ. ຍ້ອນທຸກສິ່ງທີ່ມະນຸດ "ວິໄຈ" ເຮົາ, ຍ້ອນວິທະຍາສາດຂອງເຂົາໄດ້ຖືກພັດທະນາຢ່າງບໍ່ເໝາະສົມ ການຄົ້ນຄວ້າທາງວິທະຍາສາດຂອງເຂົາກໍຍັງບໍ່ເກີດຜົນຫຍັງເລີຍ. ດ້ວຍເຫດນັ້ນ ເລື່ອງກ່ຽວກັບ "ພາບຫຼັກຂອງເຮົາ" ຈຶ່ງເປັນເລື່ອງວ່າງເປົ່າສະເໝີໂດຍບໍ່ມີໃຜຕື່ມຫຍັງໃສ່, ບໍ່ມີໃຜທຳລາຍບັນທຶກສະຖິຕິໂລກ, ເພາະແມ່ນແຕ່ການທີ່ມະນຸດຊາດຍັງຄົງຢືນຢັດໄດ້ໃນປັດຈຸບັນກໍເປັນສິ່ງປອບໂຍນທີ່ບໍ່ສາມາດປະເມີນຄ່າໄດ້ແລ້ວ ໃນທ່າມກາງຄວາມໂຊກຮ້າຍຢ່າງໃຫຍ່ພວກເຂົາ.

ວັນທີ 23 ມີນາ 1992

# ບົດທີ 24

ການຂ້ຽນຕີຂອງເຮົາໄດ້ມາເຖິງບັນດາຜູ້ຄົນ, ແຕ່ມັນກໍຍັງຄົງຫ່າງໄກຈາກຜູ້ຄົນທັງປວງ. ຊີ່ວຊີວິດຂອງທຸກຄົນແມ່ນເຕັມໄປດ້ວຍຄວາມຮັກ ແລະ ຄວາມກຽດຊັງຕໍ່ເຮົາ ແລະ ບໍ່ມີໃຜເຄີຍຮູ້ຈັກເຮົາ ແລະ ດ້ວຍເຫດນັ້ນ ທ່າທີຂອງມະນຸດທີ່ມີຕໍ່ເຮົາຈຶ່ງເປັນຮ້ອນໆໜາວໆ ແລະ ບໍ່ສາມາດເປັນປົກກະຕິໄດ້. ແຕ່ເຮົາກໍດູແລ ແລະ ປົກປ້ອງມະນຸດຢູ່ສະເໝີ, ມັນເປັນພຽງຍ້ອນຄວາມໂງ່ຂອງເຂົາທີ່ເຮັດໃຫ້ເຂົາບໍ່ສາມາດເຫັນທຸກການກະທຳ ແລະ ເຂົ້າໃຈເຈດຕະນາທີ່ຈິງໃຈຂອງເຮົາ. ເຮົາເປັນຜູ້ທີ່ນໍາພາບັນດາຊາດຕ່າງໆ ແລະ ເຮົາແມ່ນຜູ້ທີ່ສູງສົ່ງທີ່ສຸດໃນທ່າມກາງຜູ້ຄົນ; ມັນເປັນຍ້ອນມະນຸດບໍ່ຮູ້ຈັກເຮົາເທົ່ານັ້ນ. ເປັນເວລາຫຼາຍປີທີ່ເຮົາໄດ້ດໍາລົງຊີວິດທ່າມກາງມະນຸດ ແລະ ຜະເຊີນກັບຊີວິດໃນໂລກຂອງມະນຸດ, ແຕ່ເຂົາກໍປະຕິເສດເຮົາຢູ່ສະເໝີ ແລະ ປະຕິບັດຕໍ່ເຮົາຄືກັບສິ່ງມີຊີວິດທີ່ມາຈາກຕ່າງດາວ. ສະນັ້ນຍ້ອນຄວາມແຕກຕ່າງໃນອຸປະນິໄສ ແລະ ພາສາ, ຜູ້ຄົນປະຕິບັດຕໍ່ເຮົາຄືກັບຄົນແປກໜ້າທີ່ຢູ່ໃນຖະໜົນຫົນທາງ. ມັນເບິ່ງຄືກັບວ່າ ເຄື່ອງນຸ່ງຂອງເຮົາຍັງເປັນຮູບລັກສະນະພິເສດເກີນໄປ ເຊິ່ງເປັນຜົນເຮັດໃຫ້ມະນຸດຂາດຄວາມໝັ້ນໃຈທີ່ຈະເຂົ້າຫາເຮົາ. ດ້ວຍເຫດນັ້ນ ເຮົາຈຶ່ງຮູ້ສຶກເຖິງຄວາມໂດດດ່ຽວຂອງຊີວິດມະນຸດ ແລະ ດັ່ງນັ້ນ ເຮົາຈຶ່ງຮູ້ສຶກເຖິງຄວາມບໍ່ຍຸຕິທໍາຂອງໂລກມະນຸດ. ເຮົາຍ່າງທ່າມກາງຄົນທີ່ຍ່າງຜ່ານໄປມາ, ສັງເກດໃບໜ້າຂອງພວກເຂົາທັງໝົດ. ມັນເປັນຄືກັບວ່າ ພວກເຂົາດໍາລົງຊີວິດຢູ່ທ່າມກາງຄວາມເຈັບປ່ວຍ, ຄວາມເຈັບປ່ວຍທີ່ເຕັມຢູ່ໃບໜ້າຂອງພວກເຂົາເຕັມໄປດ້ວຍຄວາມໂສກເສົ້າ; ແລະ ມັນເປັນຄືກັບວ່າພວກເຂົາດໍາລົງຊີວິດຢູ່ໃນທ່າມກາງການຂ້ຽນຕີເຊັ່ນກັນ ເຊິ່ງບໍ່ໃຫ້ພວກເຮົາຖືກປົດປ່ອຍເປັນອິດສະຫຼະ. ມະນຸດລ່າມໂສ້ຕົນເອງ ແລະ ສະແດງໃຫ້ເຫັນເຖິງຄວາມຖ່ອມຕົວ. ຄົນສ່ວນໃຫຍ່ສ້າງຄວາມປະທັບໃຈຈອມປອມກ່ຽວກັບຕົນເອງເມື່ອຢູ່ຕໍ່ໜ້າເຮົາ ເພື່ອວ່າເຮົາອາດຕົບມືໃຫ້ກັບພວກເຂົາ, ຄົນສ່ວນໃຫຍ່ຕັ້ງໃຈເຮັດໃຫ້ຕົນເອງເບິ່ງຄືເປັນຕາໜ້າສົງສານເມື່ອຢູ່ຕໍ່ໜ້າເຮົາເພື່ອວ່າພວກເຂົາອາດໄດ້ຮັບເອົາຄວາມຊ່ວຍເຫຼືອຂອງເຮົາ. ລັບຫຼັງເຮົາ, ຜູ້ຄົນລ້ວນແລ້ວແຕ່ອ້ອນວອນ ແລະ ບໍ່ເຊື່ອຟັງເຮົາ. ເຮົາເວົ້າຖືກບໍ? ສິ່ງນີ້ບໍ່ແມ່ນຍຸດທະສາດການເອົາຕົວລອດຂອງມະນຸດບໍ? ຜູ້ໃດເຄີຍດໍາລົງຊີວິດຕາມເຮົາໃນຊີວິດຂອງພວກເຂົາແດ່? ຜູ້ໃດເຄີຍຍົກຍ້ອງເຮົາທ່າມກາງຄົນອື່ນແດ່? ຜູ້ໃດເຄີຍຖືກຜູກມັດຢູ່ຕໍ່ໜ້າພຣະວິນຍານແດ່? ຜູ້ໃດເຄີຍຕັ້ງໝັ້ນໃນຄໍາພະຍານຂອງພວກເຂົາໃຫ້ກັບເຮົາ ເມື່ອຢູ່ຕໍ່ໜ້າຊາຕານບໍ່? ຜູ້ໃດເຄີຍເພີ່ມຄວາມເປັນຈິງໃສ່ໃນ “ຄວາມຊື່ສັດ” ທີ່ພວກເຂົາມີຕໍ່ເຮົາແດ່? ຜູ້ໃດເຄີຍຖືກປະຖິ້ມໂດຍມັງກອນແດງໃຫຍ່ຍ້ອນເຮົາບໍ່? ຜູ້ຄົນໄດ້ສ່ຽງທາຍກັບຊາຕານ ແລະ ຕອນນີ້ກໍ່ງເກືອກກັບມັນໃນບຶງ; ພວກເຂົາເປັນຜູ້ຊ່ຽວຊານໃນການທ້າທາຍເຮົາ, ພວກເຂົາເປັນຜູ້ປະດິດການຕໍ່ຕ້ານເຮົາ ແລະ ພວກເຂົາເປັນ “ບັນດິດຊັ້ນສູງ” ໃນການປະຕິບັດກັບເຮົາຢ່າງພໍເປັນພິທີ. ຍ້ອນເຫັນແກ່ໂຊກຊະຕາຂອງເຂົາເອງ, ມະນຸດຊອກຫາຢູ່ບ່ອນນີ້ ແລະ ບ່ອນນັ້ນເທິງແຜ່ນດິນໂລກ ແລະ ເມື່ອເຮົາກວັກມືໃຫ້ເຂົາເຂົ້າມາຫາ, ເຂົາກໍຍັງບໍ່ສາມາດຮູ້ສຶກເຖິງຄວາມລ້ຳຄ່າຂອງເຮົາ ແລະ ສືບຕໍ່ມີ “ຄວາມເຊື່ອ” ທີ່ເພິ່ງພາຕົນເອງ, ບໍ່ເຕັມໃຈທີ່ຈະເປັນ “ພາລະ” ໃຫ້ກັບຄົນອື່ນ. “ຄວາມ

ປາຖະໜາ" ຂອງມະນຸດແມ່ນລ້ຳຄ່າ, ແຕ່ບໍ່ເຄີຍມີຄວາມປາຖະໜາຂອງໃຜຈັກຄົນທີ່ໄດ້ຮັບຄະແນນເຕັມຈັກເທື່ອ ນັ້ນກໍຄື ພວກເຂົາລົ້ມລະລາຍຕໍ່ໜ້າເຮົາ, ລົ້ມລົງໂດຍບໍ່ມີສຽງ.

ເຮົາໄດ້ເວົ້າທຸກມື້ ແລະ ເຮົາເຮັດສິ່ງໃໝ່ໆໃນແຕ່ລະມື້. ຖ້າມະນຸດບໍ່ໃຊ້ກຳລັງຂອງເຂົາທັງໝົດ, ແລ້ວເຂົາກໍຈະຟັງສຽງຂອງເຮົາໄດ້ຍາກ ແລະ ເຂົາຈະພົບວ່າມັນຍາກທີ່ຈະເຫັນໃບໜ້າຂອງເຮົາ. ຜູ້ເປັນທີ່ຮັກອາດຈະດີຫຼາຍ ແລະ ຄຳເວົ້າຂອງພຣະອົງອ່ອນໂຍນສຸດໆ, ແຕ່ມະນຸດບໍ່ສາມາດເບິ່ງເຫັນໃບໜ້າທີ່ສະຫງ່າງາມຂອງພຣະອົງ ແລະ ຍິນສຽງຂອງພຣະອົງໄດ້ຢ່າງງ່າຍດາຍ. ທົ່ວຍຸກຕ່າງໆ, ບໍ່ມີໃຜເຄີຍເບິ່ງເຫັນໃບໜ້າຂອງເຮົາໄດ້ຢ່າງງ່າຍດາຍ. ເຮົາເຄີຍເວົ້າກັບເປໂຕ ແລະ "ປະກົດ" ຕໍ່ເປໂຕ ໂດຍບໍ່ໄດ້ປະກົດຕໍ່ຄົນອື່ນອີກ ຍົກເວັ້ນຊາວອິດສະຣາເອນ ທີ່ໄດ້ເຫັນໃບໜ້າຂອງເຮົາຢ່າງແທ້ຈິງ. ໃນປັດຈຸບັນ, ເຮົາໄດ້ມາຢູ່ທ່າມກາງມະນຸດເພື່ອດຳລົງຊີວິດຮ່ວມກັບເຂົາດ້ວຍຕົວເຮົາເອງ. ເປັນໄປໄດ້ບໍວ່າສິ່ງນີ້ເບິ່ງຄືບໍ່ພິເສດ ແລະ ມີຄ່າຕໍ່ພວກເຈົ້າແທ້ໆ? ພວກເຈົ້າບໍ່ປາຖະໜາທີ່ຈະເຮັດໃຫ້ເວລາຂອງພວກເຈົ້າເກີດປະໂຫຍດສູງສຸດບໍ? ພວກເຈົ້າຕ້ອງການທີ່ຈະປ່ອຍໃຫ້ມັນຜ່ານພວກເຈົ້າໄປແບບນີ້ບໍ? ເຂັມໂມງທີ່ຢູ່ໃນຄວາມຄິດຂອງຜູ້ຄົນຈະຢຸດຢ່າງກະທັນຫັນໄດ້ບໍ? ຫຼື ເວລາສາມາດຫວນກັບຄືນໄດ້ບໍ? ຫຼື ມະນຸດສາມາດກາຍເປັນຄົນໜຸ່ມອີກຄັ້ງໄດ້ບໍ? ຊີວິດທີ່ໄດ້ຮັບພອນໃນປັດຈຸບັນຈະກັບມາອີກຄັ້ງໄດ້ບໍ? ເຮົາບໍ່ມອບ "ລາງວັນ" ທີ່ເໝາະສົມໃຫ້ກັບມະນຸດສຳລັບ "ຂີ້ເຫຍື້ອ" ຂອງເຂົາ. ເຮົາພຽງແຕ່ສືບຕໍ່ປະຕິບັດພາລະກິດຂອງເຮົາ, ແຍກອອກຈາກສິ່ງຕ່າງໆ ແລະ ບໍ່ໄດ້ຢຸດກະແສເວລາ ເພາະມະນຸດຫຍຸ້ງວຽກ ຫຼື ຍ້ອນສຽງຮ້ອງໄຫ້ຂອງເຂົາ. ເປັນເວລາຫຼາຍພັນປີ, ບໍ່ມີໃຜສາມາດແບ່ງແຍກກຳລັງຂອງເຮົາ ແລະ ບໍ່ມີໃຜສາມາດລົບກວນແຜນການເດີມຂອງເຮົາໄດ້. ເຮົາຈະຢູ່ເໜືອອາວະກາດ ແລະ ກວມເອົາຍຸກຕ່າງໆ ແລະ ເລີ່ມຕົ້ນພາກສ່ວນສຳຄັນຂອງແຜນການທັງໝົດຂອງເຮົາ ທັງຢູ່ເບື້ອງເທິງ ແລະ ຢູ່ທ່າມກາງທຸກສິ່ງ. ບໍ່ມີໃຜເລີຍທີ່ສາມາດຮັບການປະຕິບັດຢ່າງພິເສດຈາກເຮົາໄດ້ ຫຼື "ລາງວັນ" ຈາກມືຂອງເຮົາໄດ້ເຖິງວ່າພວກເຂົາໄດ້ອ້າປາກຂອງພວກເຂົາ ແລະ ອະທິຖານຂໍສິ່ງເຫຼົ່ານີ້ ແລະ ເຖິງແມ່ນວ່າ ພວກເຂົາໄດ້ເດ່ມືຂອງພວກເຂົາອອກ ແລະ ລືມທຸກສິ່ງ, ຮຽກຮ້ອງສິ່ງເຫຼົ່ານີ້ຈາກເຮົາ. ບໍ່ມີໃຜເລີຍທ່າມກາງພວກເຂົາເຮັດໃຫ້ເຮົາເໜັງ ແລະ ພວກເຂົາລ້ວນແລ້ວແຕ່ຖືກຊຸກຍູ້ຄືນດ້ວຍສຽງ "ໄຮ້ຫົວໃຈ" ຂອງເຮົາ. ຄົນສ່ວນໃຫຍ່ຍັງເຊື່ອວ່າ ພວກເຂົາ "ໜຸ່ມເກີນໄປ" ແລະ ສະນັ້ນພວກເຂົາຈຶ່ງລໍຖ້າໃຫ້ເຮົາສະແດງຄວາມເມດຕາທີ່ຍິ່ງໃຫຍ່, ເຫັນອົກເຫັນໃຈຕໍ່ພວກເຂົາເປັນຄັ້ງທີສອງ ແລະ ພວກເຂົາຂໍຮ້ອງໃຫ້ເຮົາອະນຸຍາດໃຫ້ພວກເຂົາມາຜ່ານປະຕູຫຼັງ. ແຕ່ວ່າ ຈະໃຫ້ເຮົາຢຸດເຊົາແຜນການຂອງເຮົາເປັນບາງຄັ້ງບາງຄາວໄດ້ແນວໃດ? ຈະໃຫ້ເຮົາຢຸດໂລກທີ່ກຳລັງໝູນວຽນ ເພື່ອເຫັນແກ່ຄວາມໜຸ່ມຂອງມະນຸດ ເພື່ອວ່າ ພວກເຂົາຈະໄດ້ດຳລົງຊີວິດຕໍ່ໄປອີກສອງສາມປີເທິງແຜ່ນດິນໂລກແນວບໍ? ສະໝອງຂອງມະນຸດຊັບຊ້ອນຫຼາຍ, ແຕ່ມັນກໍເບິ່ງຄືກັບວ່າ ຍັງມີສິ່ງຕ່າງໆທີ່ມັນຂາດຫາຍໄປ. ດັ່ງນັ້ນ ໃນຄວາມຄິດຂອງມະນຸດຈຶ່ງປາກົດມີ "ຫົນທາງທີ່ມະຫັດສະຈັນ" ໃນການພະຍາຍາມຂັດຂວາງພາລະກິດຂອງເຮົາ.

ເຖິງແມ່ນມີຫຼາຍຄັ້ງທີ່ເຮົາໄດ້ໃຫ້ອະໄພມະນຸດສຳລັບຄວາມຜິດບາບຂອງເຂົາ ແລະ ສະແດງ

ຄວາມນິຍົມຊົມຊອບເປັນພິເສດ ຍ້ອນຄວາມອ່ອນແອຂອງເຂົາ, ຍັງມີຫຼາຍຄັ້ງທີ່ເຮົາປະຕິບັດຕໍ່ເຂົາຢ່າງເໝາະສົມ ຍ້ອນຄວາມໂງ່ຂອງເຂົາ. ມັນເປັນພຽງແຕ່ຍ້ອນມະນຸດບໍ່ເຄີຍຮູ້ຈັກວິທີຊື່ນຊົມຄວາມເມດຕາຂອງເຮົາ ຈົນວ່າເຂົາໄດ້ຈົມລົງສູ່ສະຖານະການຂອງເຂົາໃນປັດຈຸບັນ: ປົກຄຸມດ້ວຍຝຸ່ນ, ເຄື່ອງນຸ່ງຂາດໜ້າຂາດຫຼັງ, ຜົມຫຍ້ອງຄືກັບຝຸ່ມຫຍ້າ, ໃບໜ້າຂອງເຂົາອາບໄປດ້ວຍຮອຍເປື້ອນ, ຕີນຂອງເຂົາໃສ່ເກີບທີ່ຫຍາບ, ເຮັດດ້ວຍຕົວເອງ, ມືຂອງເຂົາຫ້ອຍຕ່ອງແຕ່ງໄປມາຢູ່ທາງຂ້າງດັ່ງເລັບນົກອິນຊີທີ່ຕາຍແລ້ວ. ເມື່ອເຮົາເປີດຕາຂອງເຮົາອອກ ແລະ ຫຼຽວເບິ່ງ, ມັນເປັນຄືກັບວ່າມະນຸດຫາກໍ່ຄານອອກຈາກຂຸມເລິກທີ່ສຸດ. ເຮົາບໍ່ສາມາດເຮັດຫຍັງໄດ້ ນອກຈາກໃຈຮ້າຍ: ເຮົາທົນຕໍ່ມະນຸດຢູ່ສະເໝີ, ແຕ່ເຮົາຈະຍອມໃຫ້ມານຮ້າຍໄປໆ ແລະ ມາໆໃນອານາຈັກທີ່ບໍລິສຸດຂອງເຮົາຕາມທີ່ມັນພໍໃຈໄດ້ແນວໃດ? ເຮົາຈະຍອມໃຫ້ຄົນຂໍທານກິນອາຫານໃນຄົວເຮືອນຂອງເຮົາລ້າໆໄດ້ແນວໃດ? ເຮົາຈະທົນໃຫ້ຜີຮ້າຍສົກກະປົກເປັນແຂກໃນຄົວເຮືອນຂອງເຮົາໄດ້ແນວໃດ? ມະນຸດ “ເຄັ່ງຄັດກັບຕົນເອງ” ຢູ່ສະເໝີ ແລະ “ບໍ່ເຄັ່ງຄັດຕໍ່ຄົນອື່ນ”, ແຕ່ເຂົາກໍບໍ່ເຄີຍສຸພາບອ່ອນນ້ອມຕໍ່ເຮົາແມ່ນແຕ່ໜ້ອຍດຽວ, ຍ້ອນເຮົາເປັນພຣະເຈົ້າທີ່ຢູ່ໃນສະຫວັນ ແລະ ສະນັ້ນ ເຂົາຈຶ່ງປະຕິບັດຕໍ່ເຮົາແບບແຕກຕ່າງ ແລະ ບໍ່ເຄີຍມີຄວາມຮັກສຳລັບເຮົາແມ່ນແຕ່ໜ້ອຍດຽວ. ມັນເປັນຄືກັບວ່າສາຍຕາຂອງມະນຸດມີໄຫວພິບເປັນພິເສດ: ທັນທີທີ່ເຂົາພົບກັບເຮົາ, ສີໜ້າຂອງເຂົາກໍເລີ່ມປ່ຽນແປງທັນທີ ແລະ ເຂົາກໍເພີ່ມສີໜ້າເລັກນ້ອຍໃສ່ໃນໃບໜ້າທີ່ເຢືອກເຢັນ ແລະ ເສີຍໆຂອງເຂົາ. ເຮົາບໍ່ບັງຄັບໃຊ້ການລົງໂທດທີ່ເໝາະສົມກັບມະນຸດ ຍ້ອນທ່າທີຂອງເຂົາມີຕໍ່ເຮົາ, ພຽງແຕ່ຫຼຽວເບິ່ງທ້ອງຟ້າຈາກຈັກກະວານເບື້ອງເທິງ ແລະ ປະຕິບັດພາລະກິດຂອງເຮົາເທິງແຜ່ນດິນໂລກຈາກບ່ອນນັ້ນ. ໃນຄວາມຊົງຈຳຂອງມະນຸດ, ເຮົາບໍ່ເຄີຍສະແດງຄວາມເມດຕາກັບຄົນໃດຈັກເທື່ອ, ແຕ່ເຮົາກໍບໍ່ເຄີຍທາລຸນຄົນໃດຄົນໜຶ່ງຈັກເທື່ອ. ເພາະມະນຸດບໍ່ປ່ອຍໃຫ້ມີ “ບ່ອນວ່າງ” ໃນຫົວໃຈຂອງເຂົາສຳລັບເຮົາ, ເມື່ອເຮົາຫຸ້ມເຫທຸກສິ່ງ ແລະ ອາໄສຢູ່ພາຍໃນເຂົາ, ເຂົາກໍບັງຄັບໃຫ້ເຮົາອອກຢ່າງບໍ່ມີພິທີຫຍັງເລີຍ ແລະ ຫຼັງຈາກນັ້ນກໍໃຊ້ການເວົ້າ ແລະ ການປະຈົບປະແຈງທີ່ນົ້ມນວນເປັນຂໍ້ອ້າງ, ເວົ້າວ່າເຂົາກໍຂາດເຂີນເກີນໄປ ແລະ ບໍ່ສາມາດສະໜອງຕົນເອງສຳລັບຄວາມສຸກຂອງເຮົາໄດ້. ເມື່ອເຂົາເວົ້າ, ໃບໜ້າຂອງເຮົາກໍຄື້ມດ້ວຍ “ກ້ອນເມກທີ່ມືດມົວ” ຢູ່ຕະຫຼອດເວລາ, ຄືກັບວ່າໄພພິບັດອາດເກີດຂຶ້ນກັບມະນຸດໄດ້ທຸກເວລາ. ແຕ່ເຂົາກໍຍັງຂໍໃຫ້ເຮົາຈາກໄປ ໂດຍບໍ່ຄຳນຶງເຖິງໄພອັນຕະລາຍທີ່ຈະເກີດຂຶ້ນ. ເຖິງແມ່ນເຮົາມອບພຣະທຳຂອງເຮົາ ແລະ ຄວາມອົບອຸ່ນແຫ່ງການອ້ອມກອດຂອງເຮົາໃຫ້ກັບມະນຸດ, ເຂົາກໍເບິ່ງຄືກັບວ່າ ບໍ່ມີຫູຟັງ ແລະ ສະນັ້ນເຂົາຈຶ່ງບໍ່ສົນໃຈສຽງຂອງເຮົາແມ່ນແຕ່ໜ້ອຍດຽວ, ກົງກັນຂ້າມ ເຂົາຈັບຫົວຂອງເຂົາຢ່າງແໜ້ນ ເມື່ອເຂົາຫຼົບໜີອອກໄປຢ່າງວ່ອງໄວ. ເຮົາຈາກລາມະນຸດດ້ວຍຄວາມຮູ້ສຶກຜິດຫວັງເລັກນ້ອຍ ແລະ ພ້ອມດ້ວຍຄວາມໂມໂຫເລັກນ້ອຍ. ໃນຂະນະດຽວກັນ, ມະນຸດກໍຫາຍໄປທັນທີໃນທ່າມກາງການໂຈມຕີຂອງລົມພາຍຸໃຫຍ່ ແລະ ຄື້ນໃຫຍ່. ຫຼັງຈາກນັ້ນບໍ່ດົນ ເຂົາກໍຮ້ອງໄຫ້ຫາເຮົາ, ແຕ່ເຂົາຈະກະທົບກັບການເຄື່ອນໄຫວຂອງສາຍລົມ ແລະ ຄື້ນໄດ້ແນວໃດ? ໃນທີ່ສຸດຮ່ອງຮອຍທັງໝົດຂອງມະນຸດກໍສູນເສຍໄປເທື່ອລະໜ້ອຍຈົນບໍ່ສາມາດຄົ້ນພົບເຂົາໄດ້ຢູ່ໃສອີກເລີຍ.

ກ່ອນຍຸກຕ່າງໆ, ເຮົາຫຼຽວເບິ່ງດິນແດນທັງໝົດຈາກຈັກກະວານເບື້ອງເທິງ. ເຮົາວາງແຜນພາລະກິດອັນຍິ່ງໃຫຍ່ເທິງແຜ່ນດິນໂລກ ນັ້ນກໍຄື ການເນລະມິດສ້າງມະນຸດຊາດຕາມໃຈເຮົາເອງ ແລະ ການສ້າງອານາຈັກເທິງແຜ່ນດິນໂລກໃຫ້ຄືກັບອານາຈັກທີ່ຢູ່ໃນສະຫວັນ, ປ່ອຍໃຫ້ລິດອຳນາດຂອງເຮົາເຕັມທ້ອງຟ້າ ແລະ ສະຕິປັນຍາຂອງເຮົາແຜ່ຂະຫຍາຍທົ່ວຈັກກະວານທັງປວງ. ດັ່ງນັ້ນ ໃນປັດຈຸບັນ ເຊິ່ງເປັນເວລາຫຼາຍພັນປີຕໍ່ມາ ເຮົາສືບຕໍ່ແຜນການຂອງເຮົາ. ແຕ່ບໍ່ມີໃຜຮູ້ຈັກແຜນການຂອງເຮົາ ຫຼື ການຄຸ້ມຄອງເທິງແຜ່ນດິນໂລກ ແລ້ວແຮງໄກທີ່ພວກເຂົາຈະເຫັນເຖິງອານາຈັກຂອງເຮົາທີ່ຢູ່ເທິງແຜ່ນດິນໂລກ. ດ້ວຍເຫດນັ້ນ ມະນຸດຈຶ່ງໄລ່ຕາມເງົາ ແລະ ມາຢູ່ຕໍ່ໜ້າເຮົາເພື່ອພະຍາຍາມຫຼອກລວງເຮົາ, ຕ້ອງການຈ່າຍ "ລາຄາງຽບໆ" ສຳລັບພອນຂອງເຮົາທີ່ຢູ່ໃນສະຫວັນ. ຜົນຮັບກໍຄື ເຂົາໄດ້ທ້າທາຍຄວາມໂມໂຫຂອງເຮົາ ແລະ ເຮົາຈຶ່ງນຳການພິພາກສາມາໃຫ້ເຂົາ, ແຕ່ເຂົາກໍຍັງບໍ່ຕື່ນ. ມັນເປັນຄືກັບວ່າເຂົາກຳລັງປະຕິບັດພາລະກິດໃຕ້ດິນ, ບໍ່ຮູ້ຈັກສິ່ງທີ່ຢູ່ເທິງດິນຢ່າງແທ້ຈິງ ຍ້ອນວ່າ ເຂົາບໍ່ໄດ້ສະແຫວງຫາຫຍັງເລີຍນອກຈາກໂອກາດຂອງເຂົາເອງ. ໃນບັນດາຜູ້ຄົນທັງປວງ, ເຮົາບໍ່ເຄີຍເຫັນໃຜທີ່ດຳລົງຊີວິດຢູ່ພາຍໃຕ້ແສງສະຫວ່າງຂອງເຮົາ. ພວກເຂົາດຳລົງຊີວິດຢູ່ໃນໂລກແຫ່ງຄວາມມືດມົວ ແລະ ເບິ່ງຄືກັບວ່າພວກເຂົາລື້ງກັບການດຳລົງຊີວິດຢູ່ທ່າມກາງຄວາມມືດມົວ. ເມື່ອແສງສະຫວ່າງມາ ພວກເຂົາກໍຢູ່ຫ່າງໄກ ແລະ ມັນຄືກັບວ່າແສງສະຫວ່າງໄດ້ລົບກວນພາລະກິດຂອງພວກເຂົາ; ດັ່ງນັ້ນ ພວກເຂົາຈຶ່ງເບິ່ງຄືກັບວ່າລຳຄານເລັກນ້ອຍ, ຄືກັບວ່າແສງສະຫວ່າງໄດ້ພັງທະລາຍຄວາມສະຫງົບສຸກຂອງພວກເຂົາທັງໝົດ ແລະ ເຮັດໃຫ້ພວກເຂົາບໍ່ສາມາດນອນຫຼັບເປັນປົກກະຕິໄດ້. ສະນັ້ນ ມະນຸດຈຶ່ງເອີ້ນເອົາກຳລັງຂອງເຂົາທັງໝົດເພື່ອຂັບໄລ່ແສງສະຫວ່າງ. ແສງສະຫວ່າງກໍເຊັ່ນກັນ ເບິ່ງຄືກັບວ່າຂາດສະຕິ ແລະ ສະນັ້ນ ຈຶ່ງປຸກມະນຸດໃຫ້ຕື່ນນອນ ແລະ ເມື່ອມະນຸດຕື່ນຂຶ້ນ, ເຂົາກໍປິດຕາຂອງເຂົາ ແລະ ປົກຄຸມດ້ວຍຄວາມໂມໂຫ. ເຂົາຄ່ອນຂ້າງບໍ່ພໍໃຈກັບເຮົາ, ແຕ່ໃນຫົວໃຈຂອງເຮົາ ເຮົາຮູ້ຈັກວິທີບັນລຸຜົນ. ເຮົາເຮັດໃຫ້ແສງສະຫວ່າງນັ້ນໃຫຍ່ຂຶ້ນເທື່ອລະໜ້ອຍ, ເຮັດໃຫ້ທຸກຄົນດຳລົງຊີວິດຢູ່ທ່າມກາງແສງສະຫວ່າງຂອງເຮົາ ແລະ ບໍ່ດົນ ພວກເຂົາກໍຊຳນານໃນການພົວພັນກັບແສງສະຫວ່າງ ແລະ ຍິ່ງໄປກວ່ານັ້ນ ທຸກຄົນແມ່ນເຫັນຄຸນຄ່າຂອງແສງສະຫວ່າງ. ໃນເວລານີ້ ອານາຈັກຂອງເຮົາໄດ້ມາຢູ່ທ່າມກາງມະນຸດແລ້ວ, ທຸກຄົນເຕັ້ນລຳດ້ວຍຄວາມປິຕິຍິນດີ ແລະ ສະເຫຼີມສະຫຼອງ, ແຜ່ນດິນໂລກ ທັນທີໃດ ກໍເຕັມໄປດ້ວຍຄວາມຍິນດີ ແລະ ເວລາແຫ່ງຄວາມສະຫງົບໃນສອງສາມພັນປີກໍຖືກທຳລາຍດ້ວຍການມາເຖິງຂອງແສງສະຫວ່າງ...

ວັນທີ 26 ມີນາ 1992

# ບົດທີ 25

ເວລາຜ່ານພົ້ນໄປ ແລະ ພາຍໃນພິບຕາດຽວ ຍຸກປັດຈຸບັນກໍມາເຖິງ. ພາຍໃຕ້ການນໍາພາຂອງພຣະວິນຍານຂອງເຮົາ, ທຸກຄົນດໍາລົງຊີວິດຢູ່ທ່າມກາງແສງສະຫວ່າງຂອງເຮົາ ແລະ ບໍ່ມີໃຜຄິດເຖິງອະດີດ ຫຼື ສົນໃຈກັບມື້ວານອີກຕໍ່ໄປ. ຜູ້ໃດແດ່ບໍ່ເຄີຍດໍາລົງຊີວິດ ແລະ ມີຕົວຕົນຢູ່ໃນປັດຈຸບັນ? ຜູ້ໃດບໍ່ໄດ້ໃຊ້ມື້ ແລະ ເດືອນທີ່ມະຫັດສະຈັນໃນອານາຈັກ? ຜູ້ໃດບໍ່ໄດ້ດໍາລົງຊີວິດຢູ່ພາຍໃຕ້ດວງຕາເວັນ? ເຖິງແມ່ນອານາຈັກໄດ້ລົງມາທ່າມກາງມະນຸດແລ້ວ, ບໍ່ມີໃຜໄດ້ພົບກັບຄວາມອົບອຸ່ນຂອງມັນຢ່າງແທ້ຈິງ; ມະນຸດພຽງແຕ່ເຫັນມັນຈາກດ້ານນອກ, ບໍ່ເຂົ້າໃຈເຖິງແກ່ນແທ້ຂອງມັນ. ໃນລະຫວ່າງເວລາທີ່ອານາຈັກຂອງເຮົາຖືກສ້າງຂຶ້ນ, ມີຜູ້ໃດແດ່ທີ່ບໍ່ດີໃຈຍ້ອນອານາຈັກນັ້ນ? ບັນດາປະເທດຕ່າງໆເທິງແຜ່ນດິນໂລກຈະຫຼົບໜີໄດ້ແທ້ບໍ? ມັງກອນແດງທີ່ຍິ່ງໃຫຍ່ສາມາດຫຼົບໜີຍ້ອນເລ່ຫຼ່ຽມຂອງມັນໄດ້ແທ້ບໍ? ບົດບັນຍັດແຫ່ງການບໍລິຫານຂອງເຮົາຖືກປະກາດໄປທົ່ວຈັກກະວານ, ພວກມັນຈັດຕັ້ງສິດອໍານາດຂອງເຮົາທ່າມກາງຄົນທັງປວງ ແລະ ພວກມັນເກີດໝາກຜົນທົ່ວຈັກກະວານ; ເຖິງຢ່າງໃດກໍຕາມ, ມະນຸດບໍ່ຮູ້ຈັກສິ່ງນີ້ຢ່າງແທ້ຈິງ. ເວລາທີ່ບົດບັນຍັດແຫ່ງການບໍລິຫານຂອງເຮົາໄດ້ຖືກເປີດເຜີຍຕໍ່ຈັກກະວານ ເຊິ່ງກໍຍັງເປັນເວລາທີ່ພາລະກິດຂອງເຮົາເທິງແຜ່ນດິນໂລກໃກ້ຈະສໍາເລັດ. ເມື່ອເຮົາປົກຄອງ ແລະ ໃຊ້ສິດອໍານາດທ່າມກາງມະນຸດທຸກຄົນ ແລະ ເມື່ອເຮົາຖືກຍອມຮັບວ່າເປັນພຣະເຈົ້າໜຶ່ງດຽວ, ອານາຈັກຂອງເຮົາຈະລົງມາເທິງແຜ່ນດິນໂລກຢ່າງສົມບູນ. ໃນປັດຈຸບັນ, ທຸກຄົນໄດ້ເລີ່ມຕົ້ນໃໝ່ໃນເສັ້ນທາງໃໝ່. ພວກເຂົາໄດ້ເລີ່ມຕົ້ນຊີວິດໃໝ່, ແຕ່ບໍ່ມີໃຜເຄີຍຜະເຊີນກັບຊີວິດເທິງແຜ່ນດິນໂລກຄ້າຍກັບສະຫວັນຢ່າງແທ້ຈິງ. ພວກເຈົ້າດໍາລົງຊີວິດທ່າມກາງແສງສະຫວ່າງຂອງເຮົາແທ້ບໍ? ເຈົ້າດໍາລົງຊີວິດທ່າມກາງພຣະທໍາຂອງເຮົາແທ້ບໍ? ຜູ້ໃດທີ່ບໍ່ຄິດເຖິງໂອກາດຂອງຕົນເອງແດ່? ຜູ້ໃດທີ່ບໍ່ອຸກໃຈຍ້ອນຊະຕາກໍາຂອງຕົນເອງແດ່? ຜູ້ໃດແດ່ທີ່ບໍ່ດີ້ນຣົນເມື່ອຢູ່ທ່າມກາງທະເລແຫ່ງຄວາມທຸກທໍລະມານ? ຜູ້ໃດແດ່ທີ່ບໍ່ປາຖະໜາທີ່ຈະເຮັດໃຫ້ຕົນເອງເປັນອິດສະຫຼະ? ພອນຕ່າງໆຈາກສະຫວັນແມ່ນຖືກມອບໃຫ້ເພື່ອແລກປ່ຽນກັບການເຮັດວຽກໜັກຂອງມະນຸດທີ່ຢູ່ເທິງແຜ່ນດິນໂລກບໍ? ຄວາມປາຖະໜາຂອງມະນຸດຈະຖືກເຮັດໃຫ້ສໍາເລັດຕາມທີ່ເຂົາປາຖະໜາໄດ້ບໍ? ເຮົາເຄີຍນໍາສະເໜີພາບທີ່ສວຍງາມຂອງອານາຈັກຕໍ່ໜ້າມະນຸດ, ແຕ່ເຂົາພຽງແຕ່ຈ້ອງເບິ່ງມັນດ້ວຍສາຍຕາໂລພາ ແລະ ບໍ່ມີໃຜສະແຫວງຫາເພື່ອເຂົ້າເຖິງມັນຢ່າງແທ້ຈິງ. ເຮົາເຄີຍ "ລາຍງານ" ກ່ຽວກັບສະຖານະການແທ້ຈິງເທິງແຜ່ນດິນໂລກໃຫ້ກັບມະນຸດ, ແຕ່ເຂົາໄດ້ແຕ່ຟັງ ແລະ ບໍ່ຮັບເອົາພຣະທໍາທີ່ອອກມາຈາກປາກຂອງເຮົາດ້ວຍໃຈຂອງເຂົາ; ເຮົາເຄີຍບອກມະນຸດກ່ຽວກັບສະຖານະການທີ່ຢູ່ໃນສະຫວັນ, ແຕ່ເຂົາກໍປະຕິບັດຕໍ່ພຣະທໍາຂອງເຮົາຄືກັບນິທານພິດສະຫວົງ ແລະ ບໍ່ຍອມຮັບໃນສິ່ງທີ່ເຮົາໄດ້ອະທິບາຍຢ່າງແທ້ຈິງ. ໃນປັດຈຸບັນນີ້, ພາບແຫ່ງອານາຈັກໄດ້ປາກົດທ່າມກາງມະນຸດ, ແຕ່ມີໃຜແດ່ທີ່ເຄີຍ "ຂ້າມຍອດພູ ແລະ ຮ່ອມພູ" ເພື່ອຊອກຫາສິ່ງນັ້ນ? ຫາກປາສະຈາກການສົ່ງເສີມຂອງເຮົາ, ມະນຸດແມ່ນຍັງບໍ່ຕື່ນຈາກຄວາມຝັນຂອງເຂົາເທື່ອ. ເຂົາຫຼົງໄຫຼກັບຊີວິດທີ່ເຂົາມີຢູ່ເທິງແຜ່ນດິນໂລກນີ້ຢ່າງແທ້ຈິງບໍ? ບໍ່ມີມາດຕະຖານສູງໃນຫົວໃຈຂອງເຂົາແທ້ບໍ?

ຄົນທີ່ເຮົາກຳນົດໃຫ້ເປັນປະຊາຊົນຂອງເຮົາແມ່ນສາມາດອຸທິດຕົນເອງໃຫ້ກັບເຮົາ ແລະ ດຳລົງຊີວິດຢ່າງສອດຄ່ອງກັບເຮົາ. ພວກເຂົາມີຄ່າໃນສາຍຕາຂອງເຮົາ ແລະ ເຫຼື້ອມໃສດ້ວຍຄວາມຮັກໃນອານາຈັກຂອງເຮົາ. ໃນບັນດາຜູ້ຄົນໃນປັດຈຸບັນ, ມີໃຜແດ່ທີ່ປະຕິບັດຕາມເງື່ອນໄຂດັ່ງກ່າວ? ໃຜແດ່ທີ່ສາມາດຜ່ານມາດຕະຖານຕາມເງື່ອນໄຂຂອງເຮົາໄດ້? ເງື່ອນໄຂຂອງເຮົາສ້າງຄວາມຫຍຸ້ງຍາກໃຫ້ກັບມະນຸດແທ້ບໍ? ເຮົາຕັ້ງໃຈເຮັດໃຫ້ເຂົາຜິດພາດບໍ? ເຮົາສະບາຍຕໍ່ຄົນທັງປວງ ແລະ ປະຕິບັດຕໍ່ພວກເຂົາຢ່າງພິເສດ. ເຖິງຢ່າງໃດກໍຕາມ ສິ່ງນີ້ແມ່ນສຳລັບປະຊາຊົນຂອງເຮົາທີ່ຢູ່ໃນປະເທດຈີນເທົ່ານັ້ນ. ມັນບໍ່ແມ່ນວ່າເຮົາປະເມີນພວກເຈົ້າຕໍ່າເກີນໄປ ຫຼື ເຮົາບໍ່ໄດ້ເບິ່ງພວກເຈົ້າດ້ວຍຄວາມບໍ່ພໍໃຈ, ແຕ່ເຮົາເບິ່ງດ້ວຍຄວາມຈິງ ແລະ ດ້ວຍເຫດຜົນກັບພວກເຈົ້າ. ຜູ້ຄົນພະເຊີນກັບຄວາມລົ້ມເຫຼວໃນຊີວິດຂອງພວກເຂົາຢ່າງຫຼີກເວັ້ນບໍ່ໄດ້, ບໍ່ວ່າຈະກ່ຽວກັບຄອບຄົວຂອງພວກເຂົາ ຫຼື ໂລກທົ່ວໄປ. ແຕ່ວ່າ ມີໃຜທີ່ສາມາດຈັດແຈງຄວາມຍາກລຳບາກດ້ວຍມືຂອງພວກເຂົາເອງໄດ້ແດ່? ມະນຸດບໍ່ສາມາດຮູ້ຈັກເຮົາ. ເຂົາມີຄວາມເຂົ້າໃຈບາງຢ່າງກ່ຽວກັບລັກສະນະພາຍນອກຂອງເຮົາ, ແຕ່ເຂົາບໍ່ມີຄວາມຮູ້ກ່ຽວກັບແກ່ນແທ້ຂອງເຮົາ; ເຂົາບໍ່ຮູ້ຈັກສ່ວນປະສົມຂອງອາຫານທີ່ເຂົາກິນ. ຜູ້ໃດສາມາດຮັບຮູ້ເຖິງຫົວໃຈຂອງເຮົາຢ່າງລະອຽດແດ່? ຜູ້ໃດສາມາດເຂົ້າໃຈຄວາມປະສົງຂອງເຮົາຢ່າງແທ້ຈິງເມື່ອມີເຮົາຢູ່ນຳ? ເມື່ອເຮົາລົງມາເທິງແຜ່ນດິນໂລກ, ມັນຖືກປົກຄຸມດ້ວຍຄວາມມືດ ແລະ ມະນຸດແມ່ນ "ນອນຫຼັບສະນິດ". ເມື່ອເຮົາຍ່າງໃນສະຖານທີ່ຕ່າງໆ ແລະ ທຸກສິ່ງທີ່ເຮົາເຫັນແມ່ນຖືກຈີກຂາດ ແລະ ຖືກທຳລາຍ ແລະ ເຮົາທົນເບິ່ງບໍ່ໄດ້ເລີຍ. ມັນເປັນຄືກັບວ່າມະນຸດພຽງແຕ່ເຕັມໃຈທີ່ຈະມີຄວາມສຸກ ແລະ ບໍ່ມີຄວາມປາຖະໜາທີ່ຈະສົນໃຈ "ສິ່ງຕ່າງໆຈາກໂລກພາຍນອກ". ທຸກຄົນບໍ່ຮູ້ວ່າ ເຮົາໄດ້ສຳຫຼວດແຜ່ນດິນໂລກທັງປວງ, ແຕ່ເຮົາບໍ່ເຫັນບ່ອນໃດທີ່ເຕັມໄປດ້ວຍຊີວິດ. ທັນໃດນັ້ນ, ເຮົາກໍສ່ອງແສງສະຫວ່າງ ແລະ ຄວາມຮ້ອນ ແລະ ຫຼຽວເບິ່ງແຜ່ນດິນໂລກຈາກສະຫວັນຊັ້ນສາມ. ເຖິງແມ່ນແສງສະຫວ່າງຈະສ່ອງລົງເທິງແຜ່ນດິນ ແລະ ຄວາມຮ້ອນແຜ່ກະຈາຍທົ່ວແຜ່ນດິນໂລກ, ແຕ່ເບິ່ງຄືກັບວ່າມີແຕ່ແສງສະຫວ່າງ ແລະ ຄວາມຮ້ອນທີ່ມີຄວາມປິຕິຍິນດີ; ພວກມັນບໍ່ໄດ້ປຸກໃຈມະນຸດ ຜູ້ທີ່ກຳລັງລ້າເລີງຢ່າງມີຄວາມສຸກ. ເມື່ອເຫັນເຖິງສິ່ງນີ້, ເຮົາກໍປະທານ "ຄ້ອນເຫຼັກ" ທີ່ເຮົາໄດ້ຈັດກຽມໄວ້ນັ້ນມາສູ່ທ່າມກາງມະນຸດທັນທີ. ເມື່ອຄ້ອນເຫຼັກຟາດລົງ, ແສງສະຫວ່າງ ແລະ ຄວາມຮ້ອນກໍແຕກກະຈາຍເທື່ອລະໜ້ອຍ ແລະ ແຜ່ນດິນໂລກກໍໂດດດ່ຽວ ແລະ ມືດມົວທັນທີ ແລະ ຍ້ອນຄວາມມືດມົວ, ມະນຸດຈຶ່ງຖືເອົາໂອກາດນີ້ສືບຕໍ່ເຮັດໃຫ້ໂຕເອງເພີດເພີນຢ່າງມີຄວາມສຸກ. ມະນຸດມີຄວາມຮູ້ສຶກຕົວເລັກນ້ອຍເຖິງການມາເຖິງຂອງຄ້ອນເຫຼັກຂອງເຮົາ, ແຕ່ເຂົາບໍ່ມີປະຕິກິລິຍາຫຍັງ ແລະ ສືບຕໍ່ເພີດເພີນກັບ "ພອນເທິງແຜ່ນດິນໂລກ" ຂອງເຂົາ. ຕໍ່ໄປ ປາກຂອງເຮົາຈະປະກາດເຖິງການຂ້ຽນຕີມະນຸດທຸກຄົນ ແລະ ຜູ້ຄົນທົ່ວຈັກກະວານຈະຖືກຄຶງໃສ່ໄມ້ກາງແຂນປີ້ນຫົວລົງລຸ່ມ. ເມື່ອການຂ້ຽນຕີຂອງເຮົາມາເຖິງ, ມະນຸດຈະສັ່ນເຊັນຍ້ອນສຽງດັງກ້ອງຂອງພູເຂົາທີ່ເພພັງລົງ ແລະ ແຜ່ນດິນໂລກທີ່ແຕກແຍກອອກຈາກກັນ ຫຼັງຈາກນັ້ນ ເຂົາກໍຖືກເຮັດໃຫ້ຕື່ນຕົກໃຈ. ເມື່ອຢ້ານກົວ ເຂົາກໍປາຖະໜາທີ່ຈະແລ່ນໜີ, ແຕ່ມັນກໍຊ້າເກີນໄປ. ເມື່ອການຂ້ຽນຕີຂອງເຮົາເກີດຂຶ້ນ, ອານາຈັກຂອງເຮົາກໍຈະລົງມາເທິງແຜ່ນດິນໂລກ

ແລະ ບັນດາປະເທດຊາດກໍຈະຖືກທຳລາຍແຕກອອກເປັນຊິ້ນສ່ວນ, ຫາຍໄປໂດຍບໍ່ມີຮ່ອງຮອຍ ແລະ ບໍ່ມີຫຍັງເຫຼືອເລີຍ.

ໃນແຕ່ລະມື້ ເຮົາຫຼຽວເບິ່ງໜ້າຈັກກະວານ ແລະ ໃນແຕ່ລະມື້ ເຮົາປະຕິບັດພາລະກິດໃໝ່ຂອງເຮົາທ່າມກາງມະນຸດ. ແຕ່ຜູ້ຄົນລ້ວນແລ້ວແຕ່ສູນເສຍຕົນເອງໃນພາລະກິດຂອງພວກເຂົາ ແລະ ບໍ່ມີໃຜສົນໃຈຕໍ່ພະລັງຂອງພາລະກິດຂອງເຮົາ ຫຼື ສັງເກດສະພາບຂອງສິ່ງຕ່າງໆທີ່ຢູ່ເໜືອຕົນເອງ. ມັນເປັນຄືກັບວ່າຜູ້ຄົນດຳລົງຊີວິດຢູ່ໃນສະຫວັນໃໝ່ ແລະ ແຜ່ນດິນໂລກໃໝ່ທີ່ພວກເຂົາສ້າງຂຶ້ນເອງ ແລະ ບໍ່ຕ້ອງການໃຫ້ໃຜແຊກແຊງ. ພວກເຂົາທຸກຄົນປະຕິບັດພາລະກິດດ້ວຍຄວາມເພີດເພີນກັບຕົນເອງ ແລະ ຊື່ນຊົມກັບຕົນເອງໃນເວລາທີ່ພວກເຂົາ "ອອກກຳລັງກາຍ". ບໍ່ມີບ່ອນໃຫ້ເຮົາຢູ່ໃນຫົວໃຈຂອງມະນຸດແທ້ບໍ? ເຮົາບໍ່ສາມາດເປັນຜູ້ປົກຄອງຫົວໃຈຂອງມະນຸດແທ້ບໍ? ຈິດວິນຍານຂອງມະນຸດໄດ້ປະຖິ້ມເຂົາແທ້ແລ້ວບໍ? ໃຜແດ່ທີ່ເຄີຍໄຕ່ຕອງຢ່າງລະອຽດເຖິງພຣະທຳທີ່ອອກມາຈາກປາກຂອງເຮົາ? ໃຜແດ່ເຄີຍຮັບຮູ້ຄວາມປາຖະໜາທີ່ຢູ່ໃນຫົວໃຈຂອງເຮົາ? ຫົວໃຈຂອງມະນຸດຖືກຄອບງຳດ້ວຍສິ່ງອື່ນແທ້ບໍ? ມີຫຼາຍຄັ້ງທີ່ເຮົາໄດ້ຮ້ອງຫາມະນຸດ, ແຕ່ມີຜູ້ໃດແດ່ທີ່ເຄີຍຮູ້ສຶກເຖິງຄວາມຮັກຂອງເຮົາ? ມີຜູ້ໃດແດ່ທີ່ດຳລົງຊີວິດໃນຄວາມເປັນມະນຸດ? ມະນຸດອາດດຳລົງຊີວິດໃນເນື້ອໜັງ, ແຕ່ເຂົາແມ່ນປາສະຈາກຄວາມເປັນມະນຸດ. ເຂົາເກີດໃນອານາຈັກສັດບໍ? ຫຼື ເຂົາເກີດໃນສະຫວັນ ແລະ ມີຄວາມເປັນພຣະເຈົ້າບໍ? ເຮົາຮຽກຮ້ອງຈາກມະນຸດ, ແຕ່ມັນຄືກັບວ່າເຂົາບໍ່ເຂົ້າໃຈພຣະທຳຂອງເຮົາ, ຄືກັບວ່າເຮົາເປັນສັດຮ້າຍທີ່ບໍ່ສາມາດເຂົ້າເຖິງໄດ້ ເຊິ່ງເປັນຕ່າງດ້າວສຳລັບເຂົາ. ເປັນເວລາຫຼາຍຄັ້ງທີ່ເຮົາຜິດຫວັງຈາກມະນຸດ, ເປັນເວລາຫຼາຍຄັ້ງທີ່ເຮົາໃຈຮ້າຍຍ້ອນການປະພຶດຕໍ່າຂອງເຂົາ ແລະ ເປັນເວລາຫຼາຍຄັ້ງທີ່ເຮົາເສົ້າເສຍໃຈຍ້ອນຄວາມອ່ອນແອຂອງເຂົາ. ເປັນຫຍັງເຮົາຈຶ່ງບໍ່ສາມາດປຸກຄວາມຮູ້ສຶກທາງຝ່າຍວິນຍານທີ່ຢູ່ໃນຫົວໃຈຂອງມະນຸດ? ເປັນຫຍັງເຮົາຈຶ່ງບໍ່ສາມາດດົນບັນດານຄວາມຮັກໃນຫົວໃຈຂອງມະນຸດ? ເປັນຫຍັງມະນຸດຈຶ່ງບໍ່ເຕັມໃຈທີ່ຈະປະຕິບັດຕໍ່ເຮົາຄືກັບແກ້ວຕາດວງໃຈຂອງເຂົາ? ຫົວໃຈຂອງມະນຸດບໍ່ແມ່ນຂອງເຂົາເອງບໍ? ສິ່ງອື່ນໄດ້ເຂົ້າສິງຢູ່ໃນຈິດວິນຍານຂອງເຂົາແລ້ວບໍ? ເປັນຫຍັງມະນຸດຈຶ່ງຮ້ອງໄຫ້ບໍ່ເຊົາຈັກເທື່ອ? ເປັນຫຍັງເຂົາຈຶ່ງເສົ້າໃຈ? ເປັນຫຍັງເມື່ອເຂົາໂສກເສົ້າ, ເຂົາຈຶ່ງບໍ່ຫົວຊາການເປັນຢູ່ຂອງເຮົາ? ເປັນໄປໄດ້ບໍທີ່ເຮົາໄດ້ແທງເຂົາ? ເປັນໄປໄດ້ບໍທີ່ເຮົາໄດ້ປະຖິ້ມເຂົາໂດຍເຈດຕະນາ?

ໃນສາຍຕາຂອງເຮົາ, ມະນຸດເປັນຜູ້ປົກຄອງເໜືອສັບພະສິ່ງທັງປວງ. ເຮົາມອບສິດອຳນາດຢ່າງໃຫຍ່ຫຼວງໃຫ້ກັບເຂົາ ເຊິ່ງເຮັດໃຫ້ເຂົາສາມາດຈັດການກັບສັບພະທຸກສິ່ງເທິງແຜ່ນດິນໂລກ: ໃບຫຍ້າທີ່ຢູ່ເທິງພູເຂົາ, ສັດຕ່າງໆທີ່ຢູ່ທ່າມກາງປ່າໄມ້ ແລະ ປາທີ່ຢູ່ໃນນໍ້າ. ແຕ່ແທນທີ່ຈະມີຄວາມສຸກຍ້ອນສິ່ງນີ້, ມະນຸດແມ່ນເຕັມໄປດ້ວຍຄວາມກະວົນກະວາຍໃຈ. ຊົ່ວຊີວິດຂອງເຂົາແມ່ນຊີວິດແຫ່ງຄວາມທຸກທໍລະມານ, ຄວາມດີ້ນຮົນ, ຄວາມສຸກທີ່ຖືກເພີ່ມເຂົ້າກັບຄວາມວ່າງເປົ່າ; ໃນຊີວິດທັງໝົດຂອງເຂົາ ບໍ່ມີການປະດິດ ແລະ ການສ້າງສິ່ງໃໝ່ໆ. ບໍ່ມີໃຜສາມາດປົດປ່ອຍຕົນເອງອອກຈາກຊີວິດທີ່ວ່າງເປົ່ານີ້ໄດ້, ບໍ່ມີໃຜເຄີຍຄົ້ນພົບຊີວິດທີ່ມີຄວາມໝາຍ ແລະ ບໍ່ມີໃຜເຄີຍຜະເຊີນກັບຊີວິດທີ່ແທ້ຈິງ.

ເຖິງແມ່ນຜູ້ຄົນໃນປັດຈຸບັນລ້ວນແລ້ວແຕ່ດຳລົງຊີວິພາຍໃຕ້ແສງສະຫວ່າງຂອງເຮົາ, ພວກເຂົາກໍບໍ່ຮູ້ຫຍັງກ່ຽວກັບຊີວິດທີ່ຢູ່ໃນສະຫວັນ. ຖ້າເຮົາບໍ່ເມດຕາຕໍ່ມະນຸດ ແລະ ບໍ່ຊ່ວຍມະນຸດຊາດໃຫ້ລອດພົ້ນ, ແລ້ວທຸກຄົນແມ່ນເກີດມາຢ່າງໄຮ້ປະໂຫຍດ, ຊີວິດຂອງພວກເຂົາທີ່ຢູ່ເທິງແຜ່ນດິນໂລກແມ່ນປາສະຈາກຄວາມໝາຍ ແລະ ພວກເຂົາກໍຈະຈາກໄປຢ່າງໄຮ້ປະໂຫຍດ ໂດຍບໍ່ມີຫຍັງໃຫ້ພາກພູມໃຈເລີຍ. ຜູ້ຄົນໃນທຸກສາສະໜາ, ທຸກຂະແໜງການໃນສັງຄົມ, ທຸກຊາດ ແລະ ທຸກນິກາຍລ້ວນແລ້ວແຕ່ຮູ້ເຖິງຄວາມວ່າງເປົ່າທີ່ຢູ່ເທິງແຜ່ນດິນໂລກ ແລະ ພວກເຂົາລ້ວນແລ້ວແຕ່ສະແຫວງຫາເຮົາ ແລະ ລໍຖ້າການກັບມາຂອງເຮົາ, ແຕ່ມີຜູ້ໃດບໍທີ່ສາມາດຮູ້ຈັກເຮົາເມື່ອເຮົາມາເຖິງ? ເຮົາສ້າງສັບພະທຸກສິ່ງ, ເຮົາສ້າງມະນຸດຊາດ ແລະ ໃນປັດຈຸບັນນີ້ ເຮົາໄດ້ລົງມາຢູ່ທ່າມກາງມະນຸດ. ແຕ່ມະນຸດໂຈມຕີເຮົາຄືນ ແລະ ແກ້ແຄ້ນເຮົາ. ພາລະກິດທີ່ເຮົາປະຕິບັດໃນມະນຸດບໍ່ໄດ້ມີຜົນປະໂຫຍດຫຍັງກັບເຂົາເລີຍບໍ? ເຮົາບໍ່ສາມາດເຮັດໃຫ້ມະນຸດພໍໃຈແທ້ບໍ? ເປັນຫຍັງມະນຸດຈຶ່ງປະຕິເສດເຮົາ? ເປັນຫຍັງມະນຸດຈຶ່ງເຢັນຊາ ແລະ ບໍ່ສົນໃຈເຮົາ? ເປັນຫຍັງແຜ່ນດິນໂລກຈຶ່ງຖືກປົກຄຸມໄປດ້ວຍຊາກສົບ? ນີ້ແມ່ນສະພາວະຂອງແຜ່ນດິນໂລກທີ່ເຮົາໄດ້ສ້າງສຳລັບມະນຸດແທ້ບໍ? ເຮົາໄດ້ມອບຊັບສົມມະຫາສານທີ່ບໍ່ສາມາດປຽບທຽບໄດ້ໃຫ້ກັບມະນຸດ ແຕ່ເປັນຫຍັງເຂົາຈຶ່ງຖວາຍມືເປົ່າຄືນໃຫ້ກັບເຮົາ? ເປັນຫຍັງມະນຸດຈຶ່ງບໍ່ຮັກເຮົາຢ່າງແທ້ຈິງ? ເປັນຫຍັງເຂົາຈຶ່ງບໍ່ມາຢູ່ຕໍ່ໜ້າເຮົາຈັກເທື່ອ? ພຣະທຳທຸກຂໍ້ຂອງເຮົາແມ່ນບໍ່ມີຜົນປະໂຫຍດຫຍັງແທ້ບໍ? ພຣະທຳຂອງເຮົາຫາຍໄປຄືກັບອາຍຮ້ອນທີ່ອອກຈາກນໍ້າແທ້ບໍ? ເປັນຫຍັງມະນຸດຈຶ່ງບໍ່ເຕັມໃຈຮ່ວມມືກັບເຮົາ? ການມາຂອງມື້ເຮົາເປັນຊ່ວງເວລາແຫ່ງຄວາມຕາຍຂອງມະນຸດແທ້ບໍ? ເຮົາສາມາດທຳລາຍມະນຸດໃນເວລາທີ່ອານາຈັກຂອງເຮົາຖືກສ້າງຂຶ້ນແທ້ບໍ? ໃນລະຫວ່າງແຜນການຄຸ້ມຄອງທັງໝົດຂອງເຮົາ, ເປັນຫຍັງຈຶ່ງບໍ່ມີໃຜເຂົ້າໃຈເຈດຕະນາຂອງເຮົາ? ເປັນຫຍັງມະນຸດຈຶ່ງກຽດຊັງ ແລະ ປະຕິເສດຖ້ອຍຄຳທີ່ອອກຈາກປາກຂອງເຮົາ ແທນທີ່ຈະຊື່ນຊົມສິ່ງເຫຼົ່ານັ້ນ? ເຮົາບໍ່ໄດ້ກ່າວຮ້າຍໃຜ, ເຮົາພຽງແຕ່ເຮັດໃຫ້ທຸກຄົນກັບຄືນສູ່ຄວາມສະຫງົບ ແລະ ປະຕິບັດພາລະກິດເພື່ອການພິຈາລະນາຕົນເອງເທົ່ານັ້ນ.

ວັນທີ 27 ມີນາ 1992

# ພວກເຈົ້າທຸກຄົນ ຈົ່ງປິຕິຍິນດີ!

ໃນແສງສະຫວ່າງຂອງເຮົາ, ຜູ້ຄົນເຫັນແສງສະຫວ່າງອີກຄັ້ງ. ໃນພຣະທຳຂອງເຮົາ, ຜູ້ຄົນຄົ້ນພົບສິ່ງທີ່ພວກເຂົາມັກ. ເຮົາມາຈາກທິດຕາເວັນອອກ, ເຮົາທັກທາຍຈາກທິດຕາເວັນອອກ. ເມື່ອລັດສະໝີຂອງເຮົາເປັ່ງປະກາຍອອກມາ, ທຸກປະຊາຊາດກໍແຈ້ງສະຫວ່າງ, ທຸກສິ່ງຖືກນຳມາສູ່ແສງສະຫວ່າງ, ບໍ່ມີແມ່ນແຕ່ສິ່ງດຽວທີ່ຢູ່ໃນຄວາມມືດອີກຕໍ່ໄປ. ໃນອານາຈັກ, ຊີວິດທີ່ຜູ້ຄົນຂອງພຣະເຈົ້າດຳລົງຊີວິດຢູ່ກັບພຣະເຈົ້າແມ່ນມີຄວາມສຸກເໜືອທີ່ຈະຊັ່ງຊາໄດ້. ສາຍນ້ຳເຕັ້ນລຳດ້ວຍຄວາມຊື່ນບານກັບຊີວິດທີ່ໂຊກລາບຂອງຜູ້ຄົນ, ພູເຂົາ ພ້ອມດ້ວຍຜູ້ຄົນຊື່ນຊົມຄວາມອຸດົມສົມບູນຂອງເຮົາ. ມະນຸດທຸກຄົນກຳລັງດີ້ນຮົນ, ເຮັດວຽກໜັກ ແລະ ສະແດງຄວາມຈົງຮັກພັກດີຂອງພວກເຂົາໃນອານາຈັກຂອງເຮົາ. ໃນອານາຈັກຂອງເຮົາ ບໍ່ມີການກະບົດອີກ, ບໍ່ມີການຕໍ່ຕ້ານອີກ; ສະຫວັນ ແລະ ແຜ່ນດິນໂລກເພິ່ງພາເຊິ່ງກັນແລະກັນ, ມະນຸດ ແລະ ເຮົາຫຍັບເຂົ້າໃກ້ກັນດ້ວຍຄວາມຮູ້ສຶກຢ່າງເລິກເຊິ່ງ, ຜ່ານຄວາມສຸກທີ່ຫວານຊື່ນຂອງຊີວິດ, ເພິ່ງພາອາໄສເຊິ່ງກັນແລະກັນ... ໃນເວລານີ້, ເຮົາເລີ່ມຕົ້ນຊີວິດຂອງເຮົາຢູ່ໃນສະຫວັນຢ່າງເປັນທາງການ. ບໍ່ມີການລົບກວນຂອງຊາຕານອີກ ແລະ ຜູ້ຄົນກໍເຂົ້າສູ່ການພັກເຊົາ. ຕະຫຼອດທົ່ວຈັກກະວານ, ຜູ້ຄົນທີ່ຖືກເລືອກຂອງເຮົາດຳລົງຊີວິດຢູ່ພາຍໃນສະຫງ່າລາສີຂອງເຮົາ, ໄດ້ຮັບພອນທີ່ຫາທຽບບໍ່ໄດ້, ບໍ່ແມ່ນໃນຖານະຜູ້ຄົນທີ່ດຳລົງຊີວິດຢູ່ທ່າມກາງຜູ້ຄົນ ແຕ່ໃນຖານະຜູ້ຄົນດຳລົງຊີວິດຢູ່ກັບພຣະເຈົ້າ. ມະນຸດຊາດທຸກຄົນໄດ້ຜ່ານຄວາມເສື່ອມຊາມຂອງຊາຕານ ແລະ ໄດ້ດື່ມຊີວິດທີ່ຂົມຂື່ນ ແລະ ຫວານຊື່ນຈົນເຖິງທີ່ສຸດ. ບັດນີ້, ເມື່ອດຳລົງຊີວິດຢູ່ໃນແສງສະຫວ່າງຂອງເຮົາ, ຄົນໆໜຶ່ງຈະບໍ່ປິຕິຍິນດີໄດ້ແນວໃດ? ຄົນໆໜຶ່ງສາມາດປະຖິ້ມຊ່ວງເວລາອັນງົດງາມນີ້ໄດ້ງ່າຍດາຍ ແລະ ປ່ອຍໃຫ້ມັນຫຼຸດໄປໄດ້ແນວໃດ? ຜູ້ຄົນເອີຍ! ຈົ່ງຮ້ອງເພງໃນຫົວໃຈຂອງເຈົ້າ ແລະ ເຕັ້ນລຳດ້ວຍຄວາມປິຕິຍິນດີເພື່ອເຮົາ! ຍົກຫົວໃຈທີ່ຈິງໃຈຂອງເຈົ້ານັ້ນຂຶ້ນ ແລະ ຖວາຍມັນໃຫ້ກັບເຮົາ! ຕີກອງຂອງເຈົ້າ ແລະ ຫຼິ້ນຢ່າງເບີກບານເພື່ອເຮົາ! ເຮົາທໍປະກາຍຄວາມສຸກຂອງເຮົາໄປທົ່ວທັງຈັກກະວານ! ເຮົາເປີດເຜີຍໃບໜ້າອັນສະຫງ່າລາສີຂອງເຮົາໃຫ້ກັບຜູ້ຄົນ! ເຮົາຈະຮ້ອງອອກມາດ້ວຍສຽງກ້ອງກັງວານ! ເຮົາຈະຢູ່ເໜືອຈັກກະວານ! ເຮົາໄດ້ປົກຄອງທ່າມກາງຜູ້ຄົນແລ້ວ! ຜູ້ຄົນສັນລະເສີນເຮົາ! ເຮົາເລື່ອນລອຍໃນສະຫວັນສີຟ້າເບື້ອງເທິງ ແລະ ຜູ້ຄົນຍ່າງໄປພ້ອມກັບເຮົາ. ເຮົາຍ່າງຢູ່ທ່າມກາງຜູ້ຄົນ ແລະຜູ້ຄົນຂອງເຮົາກໍຢູ່ອ້ອມຂ້າງເຮົາ. ຫົວໃຈຂອງຜູ້ຄົນຊື່ນບານ, ເພງຂອງພວກເຂົາສັ່ນສະເທືອນຈັກກະວານ, ເປີດອອກສະຫວັນຊັ້ນສູງ! ຈັກກະວານບໍ່ປົກຄຸມດ້ວຍໝອກອີກຕໍ່ໄປ; ບໍ່ມີຂີ້ຕົມອີກ, ບໍ່ມີການກັກນໍ້າເປື້ອນອີກ. ຜູ້ຄົນບໍລິສຸດຂອງຈັກກະວານເອີຍ! ພາຍໃຕ້ການກວດກາຂອງເຮົາ ພວກເຈົ້າສະແດງໃບໜ້າທີ່ແທ້ຈິງຂອງພວກເຈົ້າ. ພວກເຈົ້າບໍ່ແມ່ນຄົນທີ່ປົກຄຸມດ້ວຍຄວາມສົກກະປົກ ແຕ່ເປັນໄພ່ພົນທີ່ບໍລິສຸດເໝືອນດັ່ງຢົກ, ພວກເຈົ້າທຸກຄົນເປັນທີ່ຮັກຂອງເຮົາ, ພວກເຈົ້າທຸກຄົນເປັນທີ່ເພິ່ງພໍໃຈຂອງເຮົາ! ທຸກສິ່ງກັບມາມີຊີວິດອີກຄັ້ງ! ໄພ່ພົນທຸກຄົນໄດ້ກັບຄືນມາຮັບໃຊ້ເຮົາໃນສະຫວັນ, ເຂົ້າສູ່ອ້ອມກອດອັນອົບອຸ່ນຂອງເຮົາ, ບໍ່ຮ້ອງໄຫ້ອີກຕໍ່ໄປ, ບໍ່ກັງວົນອີກຕໍ່ໄປ, ຖວາຍຕົນເອງໃຫ້ກັບເຮົາ,

ກັບຄືນມາສູ່ເຮືອນຂອງເຮົາ ແລະ ໃນບ້ານເກີດເມືອງນອນຂອງພວກເຂົາ ພວກເຂົາຈະຮັກເຮົາໂດຍບໍ່ສິ້ນສຸດ! ບໍ່ເຄີຍປ່ຽນແປງຊົ່ວນິລັນດອນ! ຄວາມໂສກເສົ້າຢູ່ໃສ! ນໍ້າຕາຢູ່ໃສ! ເນື້ອໜັງຢູ່ໃສ! ແຜ່ນດິນໂລກຈາກໄປ ແຕ່ສະຫວັນຄົງຢູ່ຕະຫຼອດໄປ. ເຮົາປາກົດຕໍ່ທຸກຄົນ ແລະ ທຸກຄົນກໍສັນລະເສີນເຮົາ. ຊີວິດນີ້, ຄວາມງົດງາມນີ້, ຈາກນິດນິລັນສູ່ນິລັນດອນ ແລະ ຈະບໍ່ມີວັນປ່ຽນແປງ. ນີ້ຄືຊີວິດແຫ່ງອານາຈັກ.

# ບົດທີ 26

ແມ່ນໃຜອາໄສໃນເຮືອນຂອງເຮົາ? ແມ່ນໃຜໄດ້ລຸກຂຶ້ນເພື່ອເຫັນແກ່ເຮົາ? ແມ່ນໃຜໄດ້ທົນທຸກແທນເຮົາ? ແມ່ນໃຜໃຫ້ຄຳໝັ້ນສັນຍາຕໍ່ໜ້າເຮົາ? ແມ່ນໃຜຕິດຕາມເຮົາຈົນມາເຖິງປັດຈຸບັນ ແລະ ຍັງບໍ່ກາຍເປັນຄົນທີ່ເມີນເສີຍຢູ່? ເປັນຫຍັງມະນຸດທຸກຄົນຈຶ່ງເຢັນຊາ ແລະ ໄຮ້ຄວາມຮູ້ສຶກ? ເປັນຫຍັງມະນຸດຊາດຈຶ່ງປະຖິ້ມເຮົາ? ເປັນຫຍັງມະນຸດຈຶ່ງເລີ່ມເບື່ອໜ່າຍເຮົາ? ເປັນຫຍັງຈຶ່ງບໍ່ມີຄວາມອົບອຸ່ນໃນໂລກຂອງມະນຸດ? ໃນຂະນະທີ່ຢູ່ເທິງຊີໂອນ, ເຮົາໄດ້ຊີມລົດຊາດຄວາມອົບອຸ່ນທີ່ຢູ່ໃນສະຫວັນ ແລະ ໃນຂະນະທີ່ຢູ່ເທິງຊີໂອນ ເຮົາໄດ້ຮັບພອນທີ່ຢູ່ໃນສະຫວັນ. ອີກຄັ້ງ, ເຮົາໄດ້ດຳລົງຊີວິດຢູ່ທ່າມກາງມະນຸດຊາດ, ເຮົາໄດ້ຊີມລົດຊາດຄວາມຂົມຂື່ນຂອງໂລກມະນຸດ ແລະ ເຮົາໄດ້ເຫັນດ້ວຍຕາຂອງເຮົາເອງເຖິງສະພາບຕ່າງໆທີ່ແຕກຕ່າງກັນເຊິ່ງມີຢູ່ທ່າມກາງມະນຸດ. ມະນຸດໄດ້ປ່ຽນແປງດັ່ງທີ່ເຮົາໄດ້ "ປ່ຽນແປງ" ໂດຍບໍ່ຮູ້ຕົວ ແລະ ໃນວິທີນີ້ເທົ່ານັ້ນ ເຂົາຈຶ່ງມາເຖິງປັດຈຸບັນນີ້ໄດ້. ເຮົາບໍ່ຕ້ອງການໃຫ້ມະນຸດເຮັດຫຍັງເພື່ອເຫັນແກ່ເຮົາ ຫຼື ເຮົາບໍ່ຕ້ອງການໃຫ້ເຂົາເຮັດຫຍັງເພີ່ມຂຶ້ນເນື່ອງຈາກເຮົາ. ເຮົາພຽງແຕ່ຕ້ອງການໃຫ້ເຂົາສາມາດປະຕິບັດຕາມແຜນການຂອງເຮົາ ແລະ ບໍ່ແມ່ນບໍ່ເຊື່ອຟັງເຮົາ ຫຼື ກາຍເປັນເຄື່ອງໝາຍແຫ່ງຄວາມອັບອາຍໃຫ້ກັບເຮົາ ແຕ່ເພື່ອໃຫ້ເຂົາເປັນພະຍານຢ່າງກຶກກ້ອງໃຫ້ກັບເຮົາ. ໃນບັນດາມະນຸດ, ມີຄົນທີ່ເປັນພະຍານໃຫ້ກັບເຮົາເປັນຢ່າງດີ ແລະ ສັນລະເສີນນາມຂອງເຮົາ, ແຕ່ການປະຕິບັດຂອງມະນຸດ, ຄວາມປະພຶດຂອງມະນຸດຈະເຮັດໃຫ້ເຮົາພໍໃຈໄດ້ແນວໃດ? ເຂົາຈະສອດຄ່ອງກັບຫົວໃຈຂອງເຮົາ ຫຼື ປະຕິບັດຕາມຄວາມປະສົງຂອງເຮົາໄດ້ແນວໃດ? ນັບຕັ້ງແຕ່ພູເຂົາ ແລະ ນໍ້າເທິງແຜ່ນດິນໂລກ ແລະ ດອກໄມ້, ຫຍ້າ ແລະ ຕົ້ນໄມ້ເທິງແຜ່ນດິນໂລກ, ທຸກສິ່ງສະແດງເຖິງພາລະກິດທີ່ເຮັດດ້ວຍມືຂອງເຮົາ, ທຸກສິ່ງເປັນຢູ່ເພື່ອນາມຂອງເຮົາ. ແຕ່ເປັນຫຍັງມະນຸດຈຶ່ງບໍ່ສາມາດບັນລຸມາດຕະຖານທີ່ເຮົາຮຽກຮ້ອງ? ນີ້ເປັນຍ້ອນຄວາມຕໍ່າຕ້ອຍທີ່ເປັນຕາສັງເວດຂອງເຂົາບໍ? ມັນເປັນຍ້ອນການທີ່ເຮົາຍົກຍ້ອງເຂົາບໍ? ເປັນໄປໄດ້ບໍວ່າ ເຮົາໂຫດຮ້າຍກັບເຂົາຫຼາຍເກີນໄປ? ເປັນຫຍັງມະນຸດຈຶ່ງຢ້ານຄວາມຮຽກຮ້ອງຂອງເຮົາຢູ່ສະເໝີ? ໃນປັດຈຸບັນ, ໃນບັນດາຝູງຊົນທີ່ຢູ່ໃນອານາຈັກ, ເປັນຫຍັງເຈົ້າຈຶ່ງພຽງແຕ່ຟັງສຽງຂອງເຮົາ ແຕ່ບໍ່ປາຖະໜາທີ່ຈະໄດ້ເຫັນໃບໜ້າຂອງເຮົາ? ເປັນຫຍັງເຈົ້າຈຶ່ງເບິ່ງພຽງແຕ່ພຣະທຳຂອງເຮົາໂດຍບໍ່ໄດ້ເຮັດໃຫ້ພຣະທຳເຫຼົ່ານັ້ນສອດຄ່ອງກັບພຣະວິນຍານຂອງເຮົາ? ເປັນຫຍັງເຈົ້າຈຶ່ງແຍກເຮົາອອກຈາກສະຫວັນ ແລະ ແຜ່ນດິນໂລກ? ເປັນໄປໄດ້ບໍວ່າ ເມື່ອເຮົາຢູ່ເທິງແຜ່ນດິນໂລກ ເຮົາບໍ່ໄດ້ເປັນຄືກັນກັບຕອນທີ່ເຮົາຢູ່ໃນສະຫວັນ? ເປັນໄປໄດ້ບໍວ່າ ເມື່ອເຮົາຢູ່ສະຫວັນ ເຮົາບໍ່ສາມາດລົງມາເທິງແຜ່ນດິນໂລກ? ເປັນໄປໄດ້ບໍວ່າ ເມື່ອເຮົາຢູ່ເທິງແຜ່ນດິນໂລກ, ເຮົາບໍ່ສົມຄວນເກີດໃນສະຫວັນ? ມັນເປັນຄືກັບວ່າ ເມື່ອເຮົາຢູ່ເທິງແຜ່ນດິນໂລກ ເຮົາເປັນສິ່ງຖືກສ້າງທີ່ຕໍ່າຕ້ອຍ, ຄືກັບວ່າ ເມື່ອເຮົາຢູ່ໃນສະຫວັນ ເຮົາເປັນສິ່ງທີ່ສູງສົ່ງ ແລະ ຄືກັບວ່າມີເຫວເລິກທີ່ບໍ່ສາມາດເຊື່ອມກັນໄດ້ລະຫວ່າງສະຫວັນ ແລະ ແຜ່ນດິນໂລກ. ແຕ່ໃນໂລກມະນຸດ ພວກເຂົາເບິ່ງຄືກັບວ່າບໍ່ຮູ້ຫຍັງເລີຍກ່ຽວກັບຕົ້ນກຳເນີດຂອງສິ່ງເຫຼົ່ານີ້, ແຕ່ໄດ້ຕໍ່ຕ້ານເຮົາສະເໝີມາ, ຄືກັບວ່າພຣະທຳຂອງເຮົາມີ

ພຽງແຕ່ສຽງ ແລະ ບໍ່ມີຄວາມໝາຍ. ມະນຸດທຸກຄົນໃຊ້ຄວາມພະຍາຍາມໃນພຣະທຳຂອງເຮົາ, ດຳເນີນການສືບສວນຂອງພວກເຂົາເອງໃນຮູບຮ່າງພາຍນອກຂອງເຮົາ, ແຕ່ພວກເຂົາກໍລ້ວນແລ້ວແຕ່ພົບກັບຄວາມລົ້ມເຫຼວ ໂດຍທີ່ຄວາມພະຍາຍາມຂອງພວກເຂົາບໍ່ມີໝາກຜົນຫຍັງເລີຍ ແລະ ກົງກັນຂ້າມພວກເຂົາຖືກຕີໃຫ້ລົ້ມດ້ວຍພຣະທຳຂອງເຮົາ ແລະ ບໍ່ກ້າລຸກຂຶ້ນອີກເລີຍ.

ເມື່ອເຮົາທົດສອບຄວາມເຊື່ອຂອງມະນຸດຊາດ, ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ເປັນພະຍານຢ່າງແທ້ຈິງ, ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ສາມາດຖວາຍທຸກສິ່ງຂອງເຂົາໄດ້; ກົງກັນຂ້າມ ມະນຸດສືບຕໍ່ລີ້ ແລະ ປະຕິເສດທີ່ຈະເປີດເຜີຍຕົນເອງອອກ ຄືກັບວ່າເຮົາກຳລັງຈະຍາດຊິງຫົວໃຈຂອງເຂົາ. ແມ່ນແຕ່ໂຢບກໍບໍ່ເຄີຍຍຶດໝັ້ນໃນລະຫວ່າງການທົດລອງຂອງເພິ່ນຢ່າງແທ້ຈິງ ຫຼື ເພິ່ນບໍ່ເຄີຍປ່ອຍຄວາມຫວານຊື່ນໃນທ່າມກາງການທົນທຸກ. ທຸກຄົນປູກພຶດພັນສີຂຽວອ່ອນໆໃນຄວາມອົບອຸ່ນຂອງລະດູໃບໄມ້ປົ່ງ; ພວກມັນບໍ່ເຄີຍຢູ່ເປັນສີຂຽວຕະຫຼອດໃນຄວາມເຢືອກເຢັນໃນລະດູໜາວ. ດ້ວຍຮູບຮ່າງທີ່ມີແຕ່ກະດູກ ແລະ ຈ່ອຍເຫຼືອງຂອງເຂົາ, ມະນຸດບໍ່ສາມາດປະຕິບັດຕາມເຈດຕະນາຂອງເຮົາໄດ້. ໃນບັນດາມະນຸດທັງປວງ, ບໍ່ມີໃຜທີ່ສາມາດຮັບໃຊ້ເຮົາໂດຍເປັນແບບຢ່າງໃຫ້ກັບຄົນອື່ນໄດ້, ເພາະໂດຍພື້ນຖານແລ້ວມະນຸດຄືກັນ ແລະ ບໍ່ໄດ້ແຕກຕ່າງຈາກກັນເລີຍ ເຊິ່ງສາມາດແຍກແຍະພວກເຂົາອອກຈາກກັນໄດ້ພຽງແຕ່ເລັກນ້ອຍ. ດ້ວຍເຫດຜົນນີ້, ແມ່ນແຕ່ໃນປັດຈຸບັນ ມະນຸດກໍຍັງບໍ່ສາມາດຮູ້ຈັກພາລະກິດຂອງເຮົາຢ່າງແທ້ຈິງ. ເມື່ອການຕີສອນຂອງເຮົາໄດ້ລົງມາເຖິງມະນຸດທຸກຄົນເທົ່ານັ້ນ, ພວກເຂົາຈຶ່ງຈະຮູ້ຈັກພາລະກິດຂອງເຮົາໂດຍບໍ່ຮູ້ຕົວ ແລະ ປາສະຈາກການເຮົາກະທຳສິ່ງໃດສິ່ງໜຶ່ງ ຫຼື ບັງຄັບຄົນໃດຄົນໜຶ່ງ, ມະນຸດກໍຈະມາຮູ້ຈັກເຮົາ ແລະ ດ້ວຍເຫດນັ້ນ ພວກເຂົາກໍເປັນພະຍານໃຫ້ກັບພາລະກິດຂອງເຮົາ. ນີ້ແມ່ນແຜນການຂອງເຮົາ, ມັນເປັນລັກສະນະຂອງພາລະກິດຂອງເຮົາທີ່ໄດ້ຖືກເຮັດປະຈັກໃຫ້ເຫັນ ແລະ ມັນເປັນສິ່ງທີ່ມະນຸດຄວນຮູ້. ໃນອານາຈັກ ສິ່ງຕ່າງໆທີ່ລ້ຳເລີດແຫ່ງການສ້າງໄດ້ເລີ່ມຟື້ນຟູຄືນມາໃໝ່ ແລະ ໄດ້ຮັບພະລັງຊີວິດຂອງພວກເຂົາຄືນໃໝ່. ເນື່ອງຈາກການປ່ຽນແປງໃນສະພາບຂອງແຜ່ນດິນໂລກ, ເຂດແດນລະຫວ່າງດິນແດນຫນຶ່ງ ກັບອີກດິນແດນໜຶ່ງເລີ່ມປ່ຽນໄປ. ເຮົາໄດ້ທຳນາຍວ່າ ເມື່ອດິນແດນຖືກແຍກອອກຈາກກັນ ແລະ ດິນແດນຖືກລວມຕົວກັນ ມັນຈະເປັນເວລາທີ່ເຮົາຈີກທຸກເຊື້ອຊາດອອກເປັນຕ່ອນໆ. ໃນເວລານີ້ ເຮົາຈະເລີ່ມການສ້າງ ແລະ ການແບ່ງແຍກຈັກກະວານທັງໝົດໃໝ່ ດ້ວຍການວາງຈັກກະວານຕາມລຳດັບ ແລະ ປະຕິຮູບອັນເກົ່າໃຫ້ເປັນອັນໃໝ່. ນີ້ແມ່ນແຜນການຂອງເຮົາ ແລະ ສິ່ງເຫຼົ່ານີ້ແມ່ນພາລະກິດຂອງເຮົາ. ເມື່ອບັນດາເຊື້ອຊາດ ແລະ ຜູ້ຄົນທັງໝົດຂອງໂລກກັບມາຢູ່ຕໍ່ໜ້າບັນລັງຂອງເຮົາ, ເຮົາຈະໃຊ້ຄວາມເມດຕາທັງໝົດຂອງສະຫວັນ ແລະ ມອບໃຫ້ໂລກຂອງມະນຸດ. ສະນັ້ນ ຈຶ່ງຂອບໃຈເຮົາ, ເພາະໂລກຈະເຕັມໄປດ້ວຍຄວາມເມດຕາກະລຸນາທີ່ບໍ່ມີສິ່ງໃດທຽບໄດ້. ແຕ່ຕາບໃດທີ່ໂລກເກົ່າຍັງຢູ່, ເຮົາຈະໂຍນຄວາມໂກດຮ້າຍຂອງເຮົາລົງໃສ່ເຊື້ອຊາດຕ່າງໆ, ປະກາດພຣະບັນຍັດການປົກຄອງຂອງເຮົາໄປທົ່ວຈັກກະວານຢ່າງເປີດເຜີຍ ແລະ ຕິດຕາມການລົງໂທດຕໍ່ຜູ້ໃດກໍ່ຕາມທີ່ລະເມີດພຣະບັນຍັດດັ່ງກ່າວນັ້ນ:

ເມື່ອເວລາເຮົາຫັນໜ້າໄປສູ່ຈັກກະວານເພື່ອກ່າວ, ມະນຸດທຸກຄົນຈະໄດ້ຍິນສຽງຂອງເຮົາ ແລະ

ຈາກນັ້ນຈະເຫັນຜົນງານທັງໝົດທີ່ເຮົາໄດ້ເຮັດໃນທົ່ວຈັກກະວານ. ຜູ້ໃດທີ່ ຕັ້ງຕົນຕໍ່ຕ້ານກັບຄວາມປະສົງຂອງເຮົາ, ເວົ້າໄດ້ອີກວ່າ ຜູ້ໃດທີ່ຕໍ່ຕ້ານເຮົາດ້ວຍການກະທຳຂອງມະນຸດ ຈະຕົກຢູ່ພາຍໃຕ້ການລົງໂທດຂອງເຮົາ. ເຮົາຈະເອົາດວງດາວຢ່າງຫຼວງຫຼາຍໃນສະຫວັນ ແລະ ເຮັດໃຫ້ດວງດາວເຫຼົ່ານັ້ນເປັນດວງດາວໃໝ່ ແລະ ຈົ່ງຂອບໃຈເຮົາທີ່ດວງອາທິດ ແລະ ດວງຈັນຈະໄດ້ຮັບການສ້າງໃໝ່. ທ້ອງຟ້າຈະບໍ່ຄືເກົ່າອີກຕໍ່ໄປ ແລະ ສັບພະສິ່ງທີ່ມະຫາສານຢູ່ເທິງແຜ່ນດິນໂລກຈະໄດ້ຮັບການສ້າງໃໝ່ອີກຄັ້ງ. ທັງໝົດຈະສົມບູນດ້ວຍພຣະທຳຂອງເຮົາ. ນາໆຊາດທີ່ຢູ່ໃນຈັກກະວານຈະຖືກແບ່ງປັນໃໝ່ ແລະ ຖືກແທນທີ່ດ້ວຍອານາຈັກຂອງເຮົາ ເພື່ອໃຫ້ປະເທດຊາດຕ່າງໆໃນແຜ່ນດິນໂລກຫາຍໄປຕະຫຼອດການ ແລະ ຈະກາຍເປັນອານາຈັກທີ່ບູຊາເຮົາ, ເຊື້ອຊາດທັງໝົດຂອງແຜ່ນດິນໂລກຈະຖືກທຳລາຍ ແລະ ບໍ່ມີອີກຕໍ່ໄປ. ໃນບັນດາມະນຸດໃນຈັກກະວານ, ທຸກຄົນທີ່ເປັນຄົນຂອງພິສາດຮ້າຍຈະຖືກກຳຈັດ, ແລະ ທຸກຄົນທີ່ບູຊາຊາຕານຈະຖືກວາງລົງໄປໃນເຕົາໄຟຂອງເຮົາ, ນັ້ນກໍ່ຄື ຍົກເວັ້ນແຕ່ສຳລັບຜູ້ທີ່ຢູ່ພາຍໃນສາຍນໍ້າ, ທັງໝົດຈະຖືກປ່ຽນເປັນເທົ່າຖ່ານ. ເມື່ອເຮົາລົງໂທດຜູ້ຄົນຈຳນວນຫຼວງຫຼາຍຢ່າງໜັກ, ໃນຫຼາກຫຼາຍຂອບເຂດ ຜູ້ທີ່ຢູ່ໃນໂລກຝ່າຍສາສະໜາຈະກັບຄືນມາຫາອານາຈັກຂອງເຮົາ, ຖືກເອົາຊະນະດ້ວຍພາລະກິດຂອງເຮົາ, ເພາະວ່າພວກເຂົາຈະໄດ້ເຫັນການມາເຖິງຂອງພຣະຜູ້ບໍລິສຸດໃນເທິງກ້ອນເມກສີຂາວ. ທຸກຄົນຈະຖືກແຍກອອກຕາມປະເພດຂອງພວກເຂົາເອງ ແລະ ຈະໄດ້ຮັບການຂ້ຽນຕີທີ່ເໝາະສົມກັບການກະທຳຂອງພວກເຂົາ. ບັນດາຜູ້ທີ່ຕໍ່ຕ້ານເຮົາຈະຖືກດັບສະຫຼາຍໄປ, ສຳລັບຜູ້ທີ່ມີການກະທຳໃນແຜ່ນດິນໂລກທີ່ບໍ່ກ່ຽວຂ້ອງກັບເຮົາ, ຍ້ອນພວກເຮົາໄດ້ເຮັດໃຫ້ຕົນເອງພົ້ນໂທດແນວໃດ, ພວກເຂົາຈະສືບຕໍ່ຢູ່ເທິງແຜ່ນດິນໂລກພາຍໃຕ້ການປົກຄອງຂອງບຸດເຮົາ ແລະ ຜູ້ຄົນຂອງເຮົາ. ເຮົາຈະເປີດເຜີຍຕົວຕົນຕໍ່ບັນດາຜູ້ຄົນ ແລະ ເຊື້ອຊາດທີ່ນັບບໍ່ຖ້ວນ ແລະ ດ້ວຍສຽງຂອງເຮົາ, ເຮົາຈະເປັ່ງສຽງອອກມາເທິງແຜ່ນດິນໂລກ ເພື່ອປະກາດຄວາມສຳເລັດຂອງພາລະກິດທີ່ຍິ່ງໃຫຍ່ຂອງເຮົາໃຫ້ມະນຸດທັງປວງໄດ້ເຫັນດ້ວຍຕາຂອງພວກເຂົາເອງ.

ເມື່ອສຽງຂອງເຮົາເລິກເຊິ່ງຍິ່ງຂຶ້ນ, ເຮົາໄດ້ສັງເກດສະພາວະຂອງຈັກກະວານອີກດ້ວຍ. ສັບພະສິ່ງທັງປວງທີ່ນັບບໍ່ຖ້ວນລ້ວນແລ້ວແຕ່ຖືກສ້າງຂຶ້ນໃໝ່ຜ່ານພຣະທຳຂອງເຮົາ. ສະຫວັນປ່ຽນໄປ ແລະ ແຜ່ນດິນໂລກກໍປ່ຽນແປງເຊັ່ນກັນ. ມະນຸດຖືກເປີດໂປງໃນຮູບຮ່າງເດີມຂອງພວກເຂົາ ແລະ ຢ່າງຊ້າໆແຕ່ລະຄົນຖືກແຍກອອກຕາມປະເພດຂອງພວກເຂົາ ແລະ ຊອກຫາທາງຂອງພວກເຂົາກັບຄືນສູ່ອ້ອມກອດຂອງຄອບຄົວຂອງພວກເຂົາໂດຍທີ່ບໍ່ຮູ້ຕົວ. ສິ່ງນີ້ຈະເຮັດໃຫ້ເຮົາພໍໃຈເປັນຢ່າງຍິ່ງ. ເຮົາປາສະຈາກການລົບກວນ ແລະ ພາລະກິດອັນຍິ່ງໃຫຍ່ຂອງເຮົາກໍຈະສຳເລັດເທື່ອລະໜ້ອຍ ແລະ ສັບພະສິ່ງທັງປວງທີ່ນັບບໍ່ຖ້ວນທີ່ຖືກສ້າງຂຶ້ນໄດ້ຖືກປ່ຽນແປງ. ເມື່ອເຮົາສ້າງແຜ່ນດິນໂລກ, ເຮົາອອກແບບທຸກສິ່ງຕາມປະເພດຂອງພວກມັນ, ວາງທຸກສິ່ງທີ່ມີຮູບຮ່າງຮ່ວມກັນກັບປະເພດຂອງພວກມັນ. ເມື່ອເວລາສຸດທ້າຍຂອງແຜນການຄຸ້ມຄອງຂອງເຮົາຍັບເຂົ້າມາໃກ້, ເຮົາຈະຟື້ນຟູສະພາບດັ່ງເດີມຂອງສັບພະສິ່ງ; ເຮົາຈະຟື້ນຟູທຸກສິ່ງໃຫ້ກັບຄືນສູ່ຮູບແບບທີ່ເປັນຢູ່ດັ່ງເດີມ, ປ່ຽນແປງທຸກສິ່ງຢ່າງເລິກເຊິ່ງ, ເພື່ອວ່າທຸກສິ່ງຈະກັບຄືນສູ່ອ້ອມກອດໃນແຜນການຂອງເຮົາ. ເວລາໄດ້ມາເຖິງແລ້ວ! ຂັ້ນຕອນສຸດທ້າຍຂອງແຜນການ

ຂອງເຮົາໃກ້ຈະສຳເລັດແລ້ວ. ໂອ້, ໂລກເກົ່າທີ່ສົກກະປົກເອີຍ! ເຈົ້າຈະຕົກຢູ່ພາຍໃຕ້ພຣະທຳຂອງເຮົາຢ່າງແນ່ນອນ! ເຈົ້າຈະຖືກແຜນການຂອງເຮົາເຮັດໃຫ້ເຈົ້າຫຼຸດລົງສູ່ຄວາມວ່າງເປົ່າຢ່າງແນ່ນອນ! ໂອ້ ສັບພະສິ່ງທັງປວງທີ່ນັບບໍ່ຖ້ວນທີ່ຖືກສ້າງເອີຍ! ເຈົ້າທັງຫຼາຍຈະໄດ້ຮັບຊີວິດໃໝ່ພາຍໃນພຣະທຳຂອງເຮົາ, ບັດນີ້ ເຈົ້າຈະມີພຣະຜູ້ເປັນເຈົ້າອົງສູງສຸດຂອງເຈົ້າ! ໂອ້ ໂລກໜ່ວຍໃໝ່ທີ່ບໍລິສຸດ ແລະ ບໍ່ມີມົນທິນເອີຍ! ເຈົ້າຈະຟື້ນຄືນໃໝ່ພາຍໃນສະຫງ່າລາສີຂອງເຮົາຢ່າງແນ່ນອນ! ໂອ້ ພູເຂົາຊີໂອນເອີຍ! ຢ່າມິດງຽບອີກຕໍ່ໄປ. ເຮົາໄດ້ກັບຄືນມາຢ່າງມີໄຊຊະນະ! ຈາກບັນດາສັບພະສິ່ງທີ່ຖືກສ້າງທັງປວງ ເຮົາຈະສຳຫຼວດເບິ່ງແຜ່ນດິນໂລກທັງໝົດ. ເທິງແຜ່ນດິນໂລກ, ມະນຸດຊາດໄດ້ເລີ່ມຕົ້ນຊີວິດໃໝ່ ແລະ ໄດ້ຊະນະຄວາມຫວັງໃໝ່. ໂອ້ ປະຊາກອນຂອງເຮົາເອີຍ! ເຈົ້າຈະບໍ່ກັບຄືນສູ່ຊີວິດພາຍໃນແສງສະຫວ່າງຂອງເຮົາໄດ້ແນວໃດ? ເຈົ້າຈະບໍ່ໂດດເຕັ້ນດ້ວຍຄວາມປິຕິຍິນດີພາຍໃຕ້ການນຳພາຂອງເຮົາໄດ້ແນວໃດ? ແຜ່ນດິນໂຮຮ້ອງຂຶ້ນດ້ວຍຄວາມປິຕິຍິນດີ, ນ້ຳຝົດຟື້ນໄປດ້ວຍສຽງຫົວຢ່າງເບີກບານ! ໂອ້, ອິດສະຣາເອນທີ່ຟື້ນຄືນເອີຍ! ເຈົ້າຈະບໍ່ຮູ້ສຶກເຖິງຄວາມພາກພູມໃຈຍ້ອນການກຳນົດໄວ້ລ່ວງໜ້າຂອງເຮົາໄດ້ແນວໃດ? ແມ່ນໃຜຮ້ອງໄຫ້? ແມ່ນໃຜຄ່ຳຄວນ? ອິດສະຣາເອນໃນອະດີດບໍ່ໄດ້ມີຢູ່ອີກແລ້ວ ແລະ ອິດສະຣາເອນໃນປັດຈຸບັນໄດ້ລຸກຂຶ້ນ, ຕັ້ງຂຶ້ນ ແລະ ສູງຂຶ້ນຫຼາຍໃນໂລກ ແລະ ໄດ້ຢືນຂຶ້ນໃນໃຈຂອງມະນຸດທຸກຄົນ. ອິດສະຣາເອນໃນປັດຈຸບັນຈະໄດ້ຮັບແຫຼ່ງທີ່ມາຂອງການມີຊີວິດຜ່ານປະຊາຊົນຂອງເຮົາຢ່າງແນ່ນອນ! ໂອ, ເອຢິບທີ່ເປັນຕາກຽດຊັງເອີຍ! ແນ່ນອນ ບໍ່ແມ່ນເຈົ້າຍັງຢືນຕໍ່ຕ້ານເຮົາຢູ່ບໍ? ເຈົ້າຈະເອົາປຽບຄວາມກະລຸນາຂອງເຮົາ ແລະ ພະຍາຍາມຫຼົບໜີຈາກການຂ້ຽນຕີຂອງເຮົາໄດ້ແນວໃດ? ເຈົ້າຈະບໍ່ຢູ່ພາຍໃນການຂ້ຽນຕີຂອງເຮົາໄດ້ແນວໃດ? ທຸກຄົນທີ່ເຮົາຮັກຈະມີຊີວິດນິລັນດອນ ແລະ ທຸກຄົນທີ່ຢືນຕໍ່ສູ້ກັບເຮົາຈະຖືກເຮົາຂ້ຽນຕີຕະຫຼອດການະນານຢ່າງແນ່ນອນ. ເພາະວ່າເຮົາເປັນພຣະເຈົ້າທີ່ຫວງແຫນ ແລະ ຈະບໍ່ລະປ່ອຍມະນຸດໄປງ່າຍໆສຳລັບທຸກສິ່ງທີ່ພວກເຂົາໄດ້ກະທຳ. ເຮົາຈະເຝົ້າເບິ່ງທົ່ວແຜ່ນດິນໂລກ ແລະ ປາກົດຢູ່ທາງພາກຕາເວັນອອກຂອງໂລກດ້ວຍຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ, ຄວາມພິໂລດ ແລະ ການຂ້ຽນຕີ ເຮົາຈະເປີດເຜີຍຕົວເອງຕໍ່ມະນຸດທັງຫຼາຍທີ່ນັບບໍ່ຖ້ວນ!

ວັນທີ 29 ມີນາ 1992

# ບົດທີ 27

ຄວາມປະພຶດຂອງມະນຸດບໍ່ເຄີຍຈັບໃຈເຮົາຈັກເທື່ອ ຫຼື ມັນບໍ່ເຄີຍເຮັດໃຫ້ເຮົາຮູ້ສຶກວ່າມີຄ່າເລີຍ. ໃນສາຍຕາຂອງມະນຸດ, ເຮົາເຄັ່ງຄັດກັບເຂົາຢູ່ສະເໝີ ແລະ ເຮົາໃຊ້ສິດອຳນາດເໜືອເຂົາຢູ່ສະເໝີ. ໃນການກະທຳທຸກຢ່າງຂອງມະນຸດ, ເກືອບຈະບໍ່ມີຫຍັງເລີຍທີ່ປະຕິບັດເພື່ອເຫັນແກ່ເຮົາ, ເກືອບຈະບໍ່ມີຫຍັງເລີຍທີ່ຕັ້ງໝັ້ນຢູ່ໃນສາຍຕາຂອງເຮົາ. ໃນທີ່ສຸດແລ້ວ, ທຸກສິ່ງທີ່ກ່ຽວຂ້ອງກັບມະນຸດກໍລົ້ມສະຫຼາຍຢູ່ຕໍ່ໜ້າເຮົາໂດຍບໍ່ມີສຽງຫຍັງເລີຍ; ມີແຕ່ຫຼັງຈາກນັ້ນ ເຮົາຈຶ່ງເຮັດໃຫ້ການກະທຳຂອງເຮົາເປັນທີ່ປະຈັກ, ເຮັດໃຫ້ທຸກຄົນຮູ້ຈັກເຮົາຜ່ານຄວາມລົ້ມເຫຼວຂອງພວກເຂົາເອງ. ທຳມະຊາດຂອງມະນຸດຍັງຄົງບໍ່ປ່ຽນແປງ. ສິ່ງທີ່ຢູ່ໃນຫົວໃຈຂອງພວກເຂົາກໍບໍ່ສອດຄ່ອງກັບຄວາມປະສົງຂອງເຮົາ, ມັນບໍ່ແມ່ນສິ່ງທີ່ເຮົາຕ້ອງການ. ສິ່ງທີ່ເຮົາກຽດຊັງທີ່ສຸດແມ່ນຄວາມດື້ດ້ານ ແລະ ຄວາມຜິດຊໍ້າຊາກຂອງມະນຸດ, ແຕ່ແມ່ນຫຍັງຄືອຳນາດທີ່ເຮັດໃຫ້ມະນຸດສືບຕໍ່ລົ້ມເຫຼວໃນການຮູ້ຈັກເຮົາ, ຢູ່ຫ່າງເຮົາຕະຫຼອດເວລາ ແລະ ບໍ່ເຄີຍປະຕິບັດຕາມຄວາມປະສົງຂອງເຮົາເມື່ອຢູ່ຕໍ່ໜ້າເຮົາ ແຕ່ກົງກັນຂ້າມ ເຮັດໃຫ້ພວກເຂົາຕໍ່ຕ້ານເຮົາເມື່ອຢູ່ລັບຫຼັງເຮົາ? ນີ້ແມ່ນຄວາມຊື່ສັດຂອງພວກເຂົາບໍ? ນີ້ແມ່ນຄວາມຮັກທີ່ພວກເຂົາມີສຳລັບເຮົາບໍ? ເປັນຫຍັງພວກເຂົາຈຶ່ງບໍ່ສາມາດກັບໃຈ ແລະ ເກີດໃໝ່ໄດ້? ເປັນຫຍັງຜູ້ຄົນຈຶ່ງເຕັມໃຈທີ່ຈະດຳລົງຊີວິດຢູ່ໃນບຶງຕະຫຼອດໄປ ແທນທີ່ຈະຢູ່ໃນບ່ອນທີ່ປາສະຈາກຂີ້ຕົມ? ເປັນໄປໄດ້ບໍວ່າ ຍ້ອນເຮົາປະຕິບັດຕໍ່ພວກເຂົາຢ່າງໂຫດຮ້າຍ? ເປັນໄປໄດ້ບໍວ່າ ຍ້ອນເຮົາຊີ້ນຳພວກເຂົາໄປໃນທິດທາງທີ່ຜິດ? ເປັນໄປໄດ້ບໍວ່າ ຍ້ອນເຮົາກຳລັງນຳພາພວກເຂົາໄປສູ່ນະຮົກ? ທຸກຄົນເຕັມໃຈທີ່ຈະດຳລົງຊີວິດຢູ່ໃນ "ນະຮົກ". ເມື່ອແສງສະຫວ່າງມາເຖິງ, ຕາຂອງພວກເຂົາກໍຈະບອດທັນທີ ຍ້ອນວ່າ ທຸກສິ່ງທີ່ມີໃນພວກເຂົາແມ່ນມາຈາກນະຮົກ. ແຕ່ມະນຸດບໍ່ໃສ່ໃຈໃນສິ່ງນີ້ ແລະ ພຽງແຕ່ໄດ້ຮັບ "ພອນຈາກນະຮົກ" ເຫຼົ່ານີ້. ພວກເຂົາເຖິງກັບຍຶດຖືຊັບສົມບັດເຫຼົ່ານີ້ທັນທີ, ຢ້ານວ່າເຮົາຈະຍາດຊິງຊັບສົມບັດເຫຼົ່ານີ້ໄປ ປ່ອຍໃຫ້ພວກເຂົາບໍ່ມີ "ແຫຼ່ງກຳເນີດຊີວິດຂອງພວກເຂົາ". ຜູ້ຄົນຢ້ານເຮົາ ເຊິ່ງນັ້ນຄືເຫດຜົນທີ່ວ່າ ເມື່ອເຮົາມາເທິງແຜ່ນດິນໂລກ, ພວກເຂົາຢູ່ຫ່າງຈາກເຮົາ, ບໍ່ຢາກຫຍັບເຂົ້າໃກ້ເຮົາ ຍ້ອນພວກເຂົາບໍ່ເຕັມໃຈທີ່ຈະ "ນຳບັນຫາມາສູ່ພວກເຂົາເອງ", ແຕ່ກົງກັນຂ້າມ ປາຖະໜາທີ່ຈະຮັກສາຄວາມປອງດອງພາຍໃນຄອບຄົວຂອງພວກເຂົາ ເພື່ອວ່າພວກເຂົາອາດໄດ້ຮັບ "ຄວາມສຸກເທິງແຜ່ນດິນໂລກ". ແຕ່ເຮົາບໍ່ສາມາດປ່ອຍໃຫ້ມະນຸດເຮັດໃນສິ່ງທີ່ພວກເຂົາຕ້ອງການ, ເພາະວ່າ ການທຳລາຍຄອບຄົວຂອງມະນຸດແມ່ນສິ່ງທີ່ເຮົາມາເຮັດໃນທີ່ນີ້ແທ້ໆ. ຈາກຊ່ວງເວລາທີ່ເຮົາມາເຖິງ, ສັນຕິສຸກຈະຫາຍໄປຈາກເຮືອນຂອງພວກເຂົາ. ເຮົາຈະທຳລາຍບັນດາປະຊາຊາດໃຫ້ກາຍເປັນເສດສ່ວນນ້ອຍໆ, ຍິ່ງໄປກວ່ານັ້ນ ສຳລັບຄອບຄົວຂອງມະນຸດແມ່ນບໍ່ຕ້ອງເອີ່ຍເຖິງເລີຍ. ແມ່ນໃຜສາມາດຫຼົບໜີຈາກກຳມືຂອງເຮົາໄດ້ແດ່? ເປັນໄປໄດ້ບໍວ່າຄົນທີ່ຮັບພອນອາດຫຼົບໜີໄດ້ຍ້ອນວ່າຄວາມບໍ່ເຕັມໃຈຂອງພວກເຂົາ? ເປັນໄປໄດ້ບໍວ່າ ຄົນທີ່ທົນທຸກກັບການຂ້ຽນຕີອາດໄດ້ຮັບຄວາມເຫັນອົກເຫັນໃຈຂອງເຮົາ ຍ້ອນຄຸນນະທຳແຫ່ງຄວາມຢຳເກງຂອງພວກເຂົາ? ໃນບັນດາພຣະທຳຂອງເຮົາ, ຜູ້ຄົນໄດ້ເຫັນຄວາມປະສົງຂອງເຮົາ ແລະ ການກະທຳຂອງເຮົາ,

ແຕ່ແມ່ນໃຜສາມາດເປັນອິດສະຫຼະຈາກຄວາມຄິດຂອງພວກເຂົາເອງໄດ້? ແມ່ນໃຜສາມາດຄົ້ນພົບທາງອອກ ບໍ່ວ່າຈະຢູ່ພາຍໃນພຣະທຳຂອງເຮົາ ຫຼື ຈາກພຣະທຳຂອງເຮົາ?

ມະນຸດໄດ້ຜະເຊີນກັບຄວາມອົບອຸ່ນຂອງເຮົາ, ມະນຸດຮັບໃຊ້ເຮົາຢ່າງຈິງໃຈ ແລະ ມະນຸດກໍເຊື່ອຟັງເຮົາຢ່າງຈິງໃຈ, ເຮັດທຸກສິ່ງເພື່ອເຮົາເມື່ອຢູ່ຕໍ່ໜ້າເຮົາ. ແຕ່ນີ້ກໍບໍ່ສາມາດບັນລຸໄດ້ໂດຍຜູ້ຄົນໃນປັດຈຸບັນ; ພວກເຂົາບໍ່ໄດ້ເຮັດຫຍັງ ພຽງແຕ່ຮ້ອງໄຫ້ໃນວິນຍານຂອງພວກເຂົາຄືກັບວ່າຖືກຍາດຊີງໂດຍໝາປ່າທີ່ຫິວໂຫຍ. ພວກເຂົາພຽງແຕ່ສາມາດຫຼຽວເບິ່ງເຮົາຢ່າງໝົດຫົນທາງ, ຮ້ອງໄຫ້ເພື່ອໃຫ້ເຮົາຊ່ວຍຢ່າງບໍ່ຢຸດຢັ້ງ, ແຕ່ໃນທີ່ສຸດແລ້ວ ພວກເຂົາກໍບໍ່ສາມາດຫຼີກໜີສະຖານະການທີ່ລຳບາກຂອງພວກເຂົາໄດ້. ເຮົາຫວນຄິດເຖິງວິທີທີ່ຜູ້ຄົນໃນອະດີດສັນຍາຕໍ່ໜ້າເຮົາ, ສາບານຕໍ່ສະຫວັນ ແລະແຜ່ນດິນໂລກຕໍ່ໜ້າເຮົາເພື່ອຕອບແທນຄວາມເມດຕາຂອງເຮົາດ້ວຍຄວາມຮັກຂອງພວກເຂົາ. ພວກເຂົາຮ້ອງໄຫ້ຢ່າງໂສກເສົ້າຕໍ່ໜ້າເຮົາ ແລະ ສຽງຮ້ອງໄຫ້ຂອງພວກເຂົາກໍເປັນຕາໂສກເສົ້າຫຼາຍ ແລະ ຮັບໄດ້ຍາກ. ຍ້ອນການຕັດສິນໃຈຂອງພວກເຂົາ ເຮົາຈຶ່ງມັກໃຫ້ຄວາມຊ່ວຍເຫຼືອກັບມະນຸດຢູ່ເລື້ອຍໆ. ຫຼາຍຄັ້ງ ຜູ້ຄົນໄດ້ມາຢູ່ຕໍ່ໜ້າເຮົາເພື່ອຍິນຍອມຕໍ່ເຮົາ ໃນຮູບແບບທີ່ເປັນຕາຮັກຫຼາຍຈົນລືມໄດ້ຍາກ. ຫຼາຍຄັ້ງ ພວກເຂົາຮັກເຮົາ ບໍ່ປ່ຽນແປງໃນຄວາມຊື່ສັດຂອງພວກເຂົາ, ຄວາມຮູ້ສຶກທີ່ຈິງໃຈຂອງພວກເຂົາກໍເປັນຕາຊື່ນຊົມ. ຫຼາຍຄັ້ງ ພວກເຂົາຮັກເຮົາຈົນເຖິງຈຸດທີ່ພວກເຂົາເສຍສະຫຼະຊີວິດຂອງຕົນເອງ. ພວກເຂົາຮັກເຮົາຫຼາຍກວ່າຕົວພວກເຂົາເອງ ແລະ ເຫັນເຖິງຄວາມຈິງໃຈຂອງພວກເຂົາ ເຮົາກໍເລີຍຮັບເອົາຄວາມຮັກຂອງພວກເຂົາ. ຫຼາຍຄັ້ງ ພວກເຂົາຖວາຍຕົນເອງຕໍ່ໜ້າເຮົາ ເພື່ອເຫັນແກ່ເຮົາ ເຖິງກັບບໍ່ສົນໃຈໃນເວລາຜະເຊີນກັບຄວາມຕາຍ ແລະ ເຮົາໄດ້ເຮັດໃຫ້ຄວາມກັງວົນຫາຍໄປຈາກຄິ້ວຂອງພວກເຂົາ ແລະ ສຳຫຼວດໃບໜ້າຂອງພວກເຂົາຢ່າງລະອຽດ. ຫຼາຍຄັ້ງຈົນນັບບໍ່ຖ້ວນທີ່ເຮົາຮັກພວກເຂົາເໝືອນກັບຊັບສົມບັດທີ່ມີຄ່າ ແລະ ຫຼາຍຄັ້ງຈົນນັບບໍ່ຖ້ວນທີ່ເຮົາກຽດຊັງພວກເຂົາຄືກັບສັດຕູຂອງເຮົາເອງ. ເຖິງຢ່າງໃດກໍຕາມ, ສິ່ງທີ່ຢູ່ໃນຈິດໃຈຂອງເຮົາແມ່ນເກີນກວ່າທີ່ມະນຸດຈະເຂົ້າໃຈໄດ້. ເມື່ອຜູ້ຄົນໂສກເສົ້າ, ເຮົາມາເພື່ອປອບໃຈພວກເຂົາ ແລະ ເມື່ອພວກເຂົາອ່ອນແອ ເຮົາມາເພື່ອຊ່ວຍພວກເຂົາ. ເມື່ອພວກເຂົາຫຼົງທາງ ເຮົາໃຫ້ທິດທາງກັບພວກເຂົາ. ເມື່ອພວກເຂົາຮ້ອງໄຫ້ ເຮົາເຊັດນໍ້າຕາຂອງພວກເຂົາ. ເຖິງຢ່າງໃດກໍຕາມ ເມື່ອເຮົາໂສກເສົ້າ ແມ່ນໃຜສາມາດປອບໃຈເຮົາດ້ວຍຫົວໃຈຂອງພວກເຂົາໄດ້? ເມື່ອເຮົາເຈັບປ່ວຍ, ແມ່ນໃຜຄຳນຶງເຖິງຄວາມຮູ້ສຶກຂອງເຮົາ? ເມື່ອເຮົາໂສກເສົ້າ, ແມ່ນໃຜສາມາດຮັກສາບາດແຜທີ່ຢູ່ໃນຫົວໃຈຂອງເຮົາ? ເມື່ອເຮົາຕ້ອງການບາງຄົນ, ແມ່ນໃຜເຕັມໃຈທີ່ຈະສະເໜີເພື່ອປະຕິບັດໃຫ້ສອດຄ່ອງກັບເຮົາ? ເປັນໄປໄດ້ບໍວ່າ ບັດນີ້ ທ່າທີຜ່ານມາຂອງຜູ້ຄົນທີ່ມີຕໍ່ເຮົາໄດ້ສູນເສຍໄປແລ້ວ, ບໍ່ກັບຄືນມາອີກ? ເປັນຫຍັງພວກເຂົາຈຶ່ງບໍ່ມີຄວາມຊົງຈຳແມ່ນແຕ່ໜ້ອຍດຽວ? ເປັນໄປໄດ້ແນວໃດທີ່ຜູ້ຄົນຫຼົງລືມທຸກສິ່ງເຫຼົ່ານີ້ແລ້ວ? ສິ່ງນີ້ບໍ່ແມ່ນຍ້ອນມະນຸດຊາດໄດ້ຖືກສັດຕູຂອງພວກເຂົາເຮັດໃຫ້ເສື່ອມຊາມບໍ?

ເມື່ອທູດສະຫວັນຫຼິ້ນດົນຕີເພື່ອສັນລະເສີນເຮົາ, ສິ່ງນີ້ໄດ້ບັນດານຄວາມເມດຕາທີ່ເຮົາມີສຳລັບມະນຸດ. ບາງຄັ້ງ ຫົວໃຈຂອງເຮົາກໍເຕັມໄປດ້ວຍຄວາມໂສກເສົ້າ ແລະ ມັນເປັນໄປບໍ່ໄດ້ທີ່ຈະກຳຈັດ

ຄວາມຮູ້ສຶກທີ່ເຈັບປວດນີ້ອອກໄປຈາກຕົວເຮົາເອງ. ໃນຄວາມປິຕິຍິນດີ ແລະ ຄວາມໂສກເສົ້າຂອງການຖືກຕັດຂາດ ແລະ ຫຼັງຈາກນັ້ນກໍກັບມາຮ່ວມກັນໃໝ່ກັບມະນຸດ, ພວກເຮົາບໍ່ສາມາດແລກປ່ຽນຄວາມຮູ້ສຶກໄດ້. ຍ້ອນຖືກແຍກໃຫ້ຢູ່ໃນສະຫວັນເບື້ອງເທິງ ແລະ ແຜ່ນດິນໂລກເບື້ອງລຸ່ມ, ມະນຸດ ແລະ ເຮົາບໍ່ສາມາດພົບກັນໄດ້ເປັນປະຈຳ. ແມ່ນໃຜສາມາດຫຼີກໜີຈາກຄວາມອາວອນຫາຄວາມຮູ້ສຶກຜ່ານມາໄດ້ແດ່? ແມ່ນໃຜສາມາດຢຸດລະລຶກເຖິງອະດີດໄດ້ແດ່? ແມ່ນໃຜບໍ່ຄາດຫວັງເພື່ອຄວາມຮູ້ສຶກໃນອະດີດ? ແມ່ນໃຜຈະບໍ່ປາຖະໜາຫາການກັບມາຂອງເຮົາ? ແມ່ນໃຜຈະບໍ່ປາຖະໜາຫາການກັບມາຮ່ວມກັນໃໝ່ຂອງເຮົາກັບມະນຸດ? ຫົວໃຈຂອງເຮົາເປັນທຸກຫຼາຍ ແລະ ວິນຍານຂອງມະນຸດກໍກັງວົນຫຼາຍ. ເຖິງແມ່ນມີຄວາມຄ້າຍຄືກັນທາງຝ່າຍວິນຍານ, ພວກເຮົາກໍບໍ່ສາມາດຢູ່ນຳກັນເລື້ອຍໆໄດ້ ແລະ ພວກເຮົາບໍ່ສາມາດເຫັນກັນ ແລະ ກັນຢູ່ເລື້ອຍໆ. ສະນັ້ນ ຊີວິດຂອງບັນດາມະນຸດຊາດຈຶ່ງເຕັມໄປດ້ວຍຄວາມໂສກເສົ້າ ແລະ ຂາດກຳລັງ, ຍ້ອນມະນຸດປາຖະໜາຫາເຮົາຢູ່ສະເໝີ. ມັນເປັນຄືກັບວ່າ ມະນຸດເປັນສິ່ງທີ່ຖືກໂຍນອອກຈາກສະຫວັນ; ພວກເຂົາຮ້ອງໄຫ້ຫານາມຂອງເຮົາຢູ່ເທິງແຜ່ນດິນໂລກ, ເງີຍສາຍຕາຂອງພວກເຂົາມາຫາເຮົາຈາກພື້ນດິນ, ແຕ່ພວກເຂົາຈະສາມາດຫຼີກໜີຈາກປາກຂອງໝາປ່າທີ່ຫິວໂຫຍໄດ້ແນວໃດ? ພວກເຂົາຈະປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກໄພອັນຕະລາຍຂອງມັນ ແລະ ການລໍ້ລວງຂອງມັນໄດ້ແນວໃດ? ມະນຸດຈະບໍ່ສາມາດສະຫຼະຕົນເອງຍ້ອນຄວາມເຊື່ອຟັງຕໍ່ການຈັດກຽມໃນແຜນການຂອງເຮົາໄດ້ແນວໃດ? ເມື່ອພວກເຂົາອ້ອນວອນສຽງດັງ, ເຮົາກໍຫັນໜ້າໜີຈາກພວກເຂົາ, ເຮົາບໍ່ສາມາດທົນຫຼຽວເບິ່ງອີກຕໍ່ໄປໄດ້; ແຕ່ເຮົາຈະບໍ່ໄດ້ຍິນສຽງຮ້ອງໄຫ້ທີ່ເຕັມໄປດ້ວຍນໍ້າຕາຂອງພວກເຂົາໄດ້ແນວໃດ? ເຮົາຈະແກ້ໄຂຄວາມບໍ່ຍຸຕິທຳໃນໂລກຂອງມະນຸດ. ເຮົາຈະປະຕິບັດພາລະກິດຂອງເຮົາດ້ວຍມືຂອງເຮົາເອງທົ່ວແຜ່ນດິນໂລກ, ຫ້າມບໍ່ໃຫ້ຊາຕານທຳຮ້າຍປະຊາຊົນຂອງເຮົາອີກຕໍ່ໄປ, ຫ້າມບໍ່ໃຫ້ສັດຕູເຮັດຫຍັງກໍໄດ້ຕາມທີ່ພວກເຂົາພໍໃຈອີກແລ້ວ. ເຮົາຈະກາຍເປັນກະສັດເທິງແຜ່ນດິນໂລກ ແລະ ຍ້າຍບັນລັງຂອງເຮົາໄປຢູ່ທີ່ນັ້ນ, ເຮັດໃຫ້ສັດຕູທຸກຄົນຂອງເຮົາລົ້ມລົງເທິງພື້ນດິນ ແລະ ສາລະພາບຄວາມຜິດຂອງພວກເຂົາຕໍ່ໜ້າເຮົາ. ໃນຄວາມໂສກເສົ້າຂອງເຮົາປະກອບດ້ວຍຄວາມໂມໂຫ, ເຮົາຈະຢຽບຢໍ່າຈັກກະວານທັງປວງໃຫ້ແປ, ບໍ່ປ່ອຍໃຫ້ເຫຼືອໃຜຈັກຄົນ ແລະ ໂຈມຕີສັດຕູຂອງເຮົາໃຫ້ເກີດຄວາມຕົກໃຈຢ້ານ. ເຮົາຈະທຳລາຍແຜ່ນໂລກທັງໝົດໃຫ້ກາຍເປັນຊາກຜັງທະລາຍ ແລະ ເຮັດໃຫ້ສັດຕູຂອງເຮົາຕົກລົງສູ່ຄວາມພິນາດ, ເພື່ອວ່າຕັ້ງແຕ່ນີ້ເປັນຕົ້ນໄປ ພວກເຂົາຈະບໍ່ເຮັດໃຫ້ມະນຸດຊາດເສື່ອມຊາມອີກຕໍ່ໄປ. ແຜນການຂອງເຮົາຖືກກຳນົດແນ່ນອນແລ້ວ ແລະ ບໍ່ມີໃຜ, ບໍ່ວ່າພວກເຂົາເປັນໃຜກໍຕາມ, ຈະສາມາດປ່ຽນແປງມັນໄດ້. ເມື່ອເຮົາທ່ອງທ່ຽວໄປມາດ້ວຍຄວາມສະຫງ່າຜ່າເຜີຍເໜືອຈັກກະວານ, ມະນຸດທຸກຄົນຈະຖືກສ້າງຂຶ້ນໃໝ່ ແລະ ທຸກສິ່ງຈະຖືກຟື້ນຄືນໃໝ່. ມະນຸດຈະບໍ່ຮ້ອງໄຫ້ອີກຕໍ່ໄປ ແລະ ເຂົາຈະບໍ່ຮ້ອງໄຫ້ຂໍຄວາມຊ່ວຍເຫຼືອຈາກເຮົາອີກຕໍ່ໄປ. ແລ້ວຫົວໃຈຂອງເຮົາກໍຈະຍິນດີ ແລະ ຜູ້ຄົນຈະກັບຄືນມາສະຫຼອງກັບເຮົາ. ຈັກກະວານທັງປວງ ຕັ້ງແຕ່ເທິງລົງລຸ່ມ ຈະຕື່ນເຕັ້ນດີໃຈ...

ໃນປັດຈຸບັນ, ໃນບັນດາປະຊາຊາດເທິງແຜ່ນດິນໂລກ, ເຮົາກຳລັງປະຕິບັດພາລະກິດທີ່ເຮົາຕັ້ງໃຈ

ເຮັດໃຫ້ສຳເລັດ. ເຮົາເຄື່ອນໄຫວໄປມາທ່າມກາງມະນຸດຊາດ, ປະຕິບັດພາລະກິດທຸກຢ່າງທີ່ຢູ່ພາຍໃນແຜນການຂອງເຮົາ ແລະ ມະນຸດທຸກຄົນ ກຳລັງແຍກປະຊາຊາດຕ່າງໆເທິງແຜ່ນດິນໂລກຕາມຄວາມປະສົງຂອງເຮົາ. ຜູ້ຄົນເທິງແຜ່ນດິນໂລກສົນໃຈໃສ່ແຕ່ຈຸດໝາຍປາຍທາງຂອງພວກເຂົາເອງ, ຍ້ອນມື້ນັ້ນກຳລັງໃກ້ເຂົ້າມາ ແລະ ທູດສະຫວັນກຳລັງເປົ່າແກຂອງພວກເຂົາ. ຈະບໍ່ມີການຊັກຊ້າອີກຕໍ່ໄປ ແລະ ດັ່ງນັ້ນ ບັນດາສັບພະສິ່ງທັງປວງຈະເລີ່ມຕົ້ນດ້ວຍຄວາມຕື່ນເຕັ້ນດີໃຈ. ແມ່ນໃຜສາມາດເລື່ອນມື້ຂອງເຮົາອອກໄປຕາມຄວາມປະສົງຂອງພວກເຂົາໄດ້? ຄົນທຳມະດາສາມັນບໍ? ຫຼື ດວງດາວທີ່ຢູ່ໃນທ້ອງຟ້າສາມາດເຮັດໄດ້ບໍ? ຫຼື ທູດສະຫວັນເດ? ເມື່ອເຮົາກ່າວຖ້ອຍຄຳເພື່ອເລີ່ມຕົ້ນຄວາມລອດພົ້ນຂອງປະຊາຊົນອິດສະຣາເອນ, ມື້ຂອງເຮົາໄດ້ໃກ້ມາເຖິງມະນຸດຊາດທຸກຄົນແລ້ວ. ທຸກຄົນຢ້ານການກັບມາຂອງອິດສະຣາເອນ. ເມື່ອອິດສະຣາເອນກັບຄືນມາ, ນັ້ນຈະເປັນມື້ແຫ່ງສະຫງ່າລາສີຂອງເຮົາ ແລະ ມັນຍັງຈະເປັນມື້ທີ່ທຸກສິ່ງປ່ຽນແປງ ແລະ ກາຍເປັນສິ່ງໃໝ່. ເມື່ອການພິພາກສາທີ່ຊອບທຳກຳລັງເຂົ້າມາໃກ້ຈັກກະວານທັງປວງ, ມະນຸດທຸກຄົນເລີ່ມບໍ່ກ້າ ແລະ ຢ້ານ, ເພາະໃນໂລກຂອງມະນຸດແມ່ນບໍ່ເຄີຍໄດ້ຍິນຄວາມຊອບທຳເລີຍ. ເມື່ອດວງຕາເວັນແຫ່ງຄວາມຊອບທຳປະກົດຂຶ້ນ, ພາກຕະເວັນອອກຈະຖືກສ່ອງແສງ ແລະ ຫຼັງຈາກນັ້ນ ມັນກໍຈະສ່ອງແສງໃຫ້ກັບຈັກກະວານທັງປວງ, ສ່ອງແສງໄປເຖິງທຸກຄົນ. ຖ້າມະນຸດສາມາດປະຕິບັດຄວາມຊອບທຳຂອງເຮົາຢ່າງແທ້ຈິງ, ຈະມີຫຍັງໃຫ້ຢ້ານ? ປະຊາຊົນຂອງເຮົາທຸກຄົນລໍຖ້າການມາເຖິງແຫ່ງມື້ຂອງເຮົາ, ພວກເຂົາລ້ວນແລ້ວແຕ່ປາຖະໜາການມາເຖິງແຫ່ງມື້ຂອງເຮົາ. ພວກເຂົາລໍຖ້າໃຫ້ເຮົານຳຜົນກຳສະໜອງມາເຖິງມະນຸດຊາດທຸກຄົນ ແລະ ຈັດແຈງຈຸດໝາຍປາຍທາງຂອງມະນຸດຊາດ ໃນຖານະທີ່ເຮົາເປັນດວງຕາເວັນແຫ່ງຄວາມຊອບທຳ. ອານາຈັກຂອງເຮົາກຳລັງເຂົ້າສູ່ຮູບຮ່າງ ເໜືອຈັກກະວານທັງປວງ ແລະ ບັນລັງຂອງເຮົາຢູ່ໃນຫົວໃຈຂອງຫຼາຍຮ້ອຍລ້ານຄົນ. ດ້ວຍການຊ່ວຍເຫຼືອຂອງເທວະດາທັງຫຼາຍ, ຄວາມສຳເລັດອັນຍິ່ງໃຫຍ່ຂອງເຮົາຈະບັນລຸໃນໄວໆນີ້. ລູກໆທັງໝົດຂອງເຮົາ ແລະ ປະຊາຊົນຂອງເຮົາລໍຖ້າການກັບຄືນມາຂອງເຮົາ ປາດຖະໜາໃຫ້ເຮົາລວມຕົວກັບພວກເຂົາຄືນໃໝ່ ແລະ ຈະບໍ່ຖືກແຍກອອກຈາກກັນອີກ. ເຫດໃດປະຊາຊົນຈຳນວນຫຼວງຫຼາຍແຫ່ງອານາຈັກຂອງເຮົາຈຶ່ງບໍ່ພາກັນສະເຫຼີມສະຫຼອງຢ່າງປິຕິຍິນດີກັບການທີ່ເຮົາໄດ້ຢູ່ຮ່ວມກັນກັບພວກເຂົາ? ສິ່ງນີ້ຈະສາມາດເປັນການລວມຕົວຄັ້ງໃໝ່ທີ່ບໍ່ຕ້ອງການຄ່າຈ້າງບໍ? ເຮົາເປັນທີ່ນັບຖືໃນສາຍຕາຂອງມະນຸດທັງປວງ, ເຮົາຖືກປະກາດໄວ້ໃນຄຳກ່າວຂອງທຸກຄົນ. ຍິ່ງໄປກວ່ານັ້ນ, ເມື່ອເຮົາກັບມາ ເຮົາຈະເອົາຊະນະກຳລັງຂອງສັດຕູທັງໝົດ. ເຖິງເວລາແລ້ວ! ເຮົາຈະດຳເນີນພາລະກິດຂອງເຮົາ, ເຮົາຈະປົກຄອງເປັນກະສັດຂອງມວນມະນຸດ! ເຮົາຢູ່ໃນຈຸດແຫ່ງການກັບຄືນມາ! ແລະ ເຮົາກຳລັງຈະອອກເດີນທາງ! ນີ້ແມ່ນສິ່ງທີ່ທຸກຄົນຄາດຫວັງ, ມັນແມ່ນສິ່ງທີ່ພວກເຂົາຕ້ອງການ. ເຮົາຈະໃຫ້ມະນຸດທຸກຄົນເຫັນການມາເຖິງແຫ່ງວັນຂອງເຮົາ ແລະ ໃຫ້ພວກເຂົາຍິນດີຕ້ອນຮັບການມາເຖິງແຫ່ງວັນຂອງເຮົາດ້ວຍຄວາມສຸກ!

ວັນທີ 2 ເມສາ 1992

# ບົດທີ 28

ເມື່ອເຮົາອອກມາຈາກຊີໂອນ, ທຸກສິ່ງລໍຖ້າເຮົາ ແລະ ເມື່ອເຮົາກັບຄືນສູ່ຊີໂອນ ທຸກຄົນກໍທັກທາຍເຮົາ. ເມື່ອເຮົາອອກມາ ແລະ ໄປ, ສິ່ງຕ່າງໆທີ່ເປັນສັດຕູກັບເຮົາແມ່ນບໍ່ເຄີຍຂັດຂວາງຂັ້ນຕອນພາລະກິດຂອງເຮົາຈັກເທື່ອ ແລະ ສະນັ້ນ ພາລະກິດຂອງເຮົາຈຶ່ງກ້າວໜ້າໄປຢ່າງລາບລື້ນ. ໃນປັດຈຸບັນ, ເມື່ອເຮົາມາຢູ່ທ່າມກາງບັນດາສິ່ງຖືກສ້າງ, ທຸກສິ່ງກໍທັກທາຍເຮົາດ້ວຍຄວາມງຽບສະຫງົບ ໂດຍຢ້ານຢູ່ເລີກໆວ່າເຮົາຈະຈາກໄປອີກຄັ້ງ ແລະ ຢ້ານວ່າພວກເຂົາຈະສູນເສຍໃນສິ່ງທີ່ພວກເຂົາອາໄສເປັນສິ່ງສະໜັບສະໜູນ. ທຸກສິ່ງປະຕິບັດຕາມການນຳພາຂອງເຮົາ ແລະ ທຸກຄົນກໍເບິ່ງໄປໃນທິດທາງທີ່ມືຂອງເຮົາຊີ້ໄປ. ພຣະທຳທີ່ອອກມາຈາກປາກຂອງເຮົາກໍເຮັດໃຫ້ສິ່ງມີຊີວິດສົມບູນ ແລະ ຂ້ຽນຕີລູກຊາຍແຫ່ງຄວາມບໍ່ເຊື່ອຟັງຫຼາຍຄົນ. ສະນັ້ນ ທຸກຄົນຈຶ່ງຕັ້ງໃຈຈ້ອງເບິ່ງພຣະທຳຂອງເຮົາ ແລະ ຟັງຖ້ອຍຄຳທີ່ອອກຈາກປາກຂອງເຮົາຢ່າງໃກ້ຊິດ ແລະ ຢ້ານຢ່າງແຮງວ່າຈະສູນເສຍໂອກາດທອງນີ້ໄປ. ມັນຍ້ອນເຫດຜົນນີ້ທີ່ເຮັດໃຫ້ເຮົາສືບຕໍ່ກ່າວ ເພື່ອວ່າ ພາລະກິດຂອງເຮົາອາດຈະຖືກປະຕິບັດໄດ້ໄວຂຶ້ນ ແລະ ເພື່ອວ່າສະພາບແຫ່ງການພໍໃຈອາດປາກົດຂຶ້ນເທິງແຜ່ນດິນໂລກໄວຂຶ້ນ ແລະ ແກ້ໄຂພາບແຫ່ງຄວາມໂດດດ່ຽວຢູ່ເທິງແຜ່ນດິນໂລກ. ຕອນເຮົາຫຼຽວເບິ່ງທ້ອງຟ້າກໍເປັນເວລາທີ່ເຮົາຫັນມາຜະເຊີນກັບມະນຸດຊາດອີກຄັ້ງ; ທຸກຫົນແຫ່ງຂອງແຜ່ນດິນກໍເຕັມໄປດ້ວຍຊີວິດທັນທີ, ຂີ້ຝຸ່ນກໍບໍ່ຢູ່ໃນອາກາດອີກຕໍ່ໄປ ແລະ ຂີ້ຕົມກໍບໍ່ປົກຄຸມພື້ນດິນອີກຕໍ່ໄປ. ຕາຂອງເຮົາກໍສ່ອງແສງອອກມາທັນທີ, ເຮັດໃຫ້ປະຊາຊົນໃນທຸກຫົນແຫ່ງຂອງແຜ່ນດິນຫຼຽວເບິ່ງເຮົາ ແລະ ຫຼົບໄພໃນເຮົາ. ທ່າມກາງປະຊາຊົນໃນໂລກແຫ່ງປັດຈຸບັນ, ລວມເຖິງທຸກຄົນທີ່ຢູ່ໃນຄົວເຮືອນຂອງເຮົາ, ຜູ້ໃດລີ້ໄພໃນເຮົາຢ່າງແທ້ຈິງແດ່? ຜູ້ໃດມອບຫົວໃຈຂອງພວກເຂົາເພື່ອແລກປ່ຽນກັບລາຄາທີ່ເຮົາໄດ້ຈ່າຍແດ່? ຜູ້ໃດເຄີຍຢູ່ໃນຄວາມສະຫງົບສຸກໃນຄົວເຮືອນຂອງເຮົາແດ່? ຜູ້ໃດເຄີຍຖວາຍຕົນເອງຢູ່ຕໍ່ໜ້າເຮົາຢ່າງແທ້ຈິງແດ່? ເມື່ອເຮົາຮຽກຮ້ອງຈາກມະນຸດ, ເຂົາກໍປິດ "ສາງນ້ອຍໆ" ຂອງເຂົາທັນທີ. ເມື່ອເຮົາໃຫ້ກັບມະນຸດ, ເຂົາກໍອ້າປາກຂອງເຂົາຢ່າງໄວເພື່ອຮັບເອົາຄວາມຮັ່ງມີຂອງເຮົາຢ່າງລັບໆລີ້ໆ ແລະ ໃນຫົວໃຈຂອງເຂົາ ເຂົາສັ່ນເຊັນຢ້ານກົວຢູ່ຕະຫຼອດເວລາ ໂດຍຢ້ານຢູ່ເລີກໆວ່າ ເຮົາຈະໂຈມຕີເຂົາຄືນ. ສະນັ້ນ ປາກຂອງມະນຸດຈຶ່ງອ້າອອກເຄິ່ງໜຶ່ງ ແລະ ຫຸບຢູ່ເຄິ່ງໜຶ່ງ ແລະ ເຂົາກໍບໍ່ສາມາດຮັບເອົາຄວາມຮັ່ງມີທີ່ເຮົາປະທານໃຫ້ກັບເຂົາຢ່າງແທ້ຈິງ. ເຮົາບໍ່ກ່າວໂທດມະນຸດງ່າຍໆ, ແຕ່ເຂົາກໍດຶງມືຂອງເຮົາຢູ່ສະເໝີ ແລະ ຂໍໃຫ້ເຮົາປະທານຄວາມເມດຕາໃຫ້ກັບເຂົາ; ມີແຕ່ເມື່ອມະນຸດອ້ອນວອນເຮົາ ເຮົາຈຶ່ງປະທານ "ຄວາມເມດຕາ" ໃຫ້ກັບເຂົາອີກຄັ້ງ ແລະ ເຮົາກໍມອບພຣະທຳທີ່ຮຸນແຮງທີ່ສຸດຈາກປາກຂອງເຮົາໃຫ້ກັບເຂົາ ຈົນເຂົາຮູ້ສຶກອັບອາຍທັນທີ ແລະ ບໍ່ສາມາດຮັບເອົາ "ຄວາມເມດຕາ" ຂອງເຮົາໂດຍກົງ, ກົງກັນຂ້າມ ເຂົາໃຫ້ຄົນອື່ນສົ່ງມັນໃຫ້ກັບເຂົາ. ເມື່ອເຂົາເຂົ້າໃຈພຣະທຳທັງໝົດຂອງເຮົາຢ່າງທົ່ວເຖິງ, ວຸດທິພາວະຂອງມະນຸດກໍຖືກຕ້ອງເໝາະສົມກັບຄວາມປາຖະໜາຂອງເຮົາ ແລະ ຄຳຮ້ອງຂໍຂອງເຂົາກໍມີຜົນ ແລະ ບໍ່ໄດ້ສູນເປົ່າ ຫຼື ໄຮ້ປະໂຫຍດ; ເຮົາອວຍພອນກັບຄຳຮ້ອງຂໍຂອງມະນຸດຊາດທີ່ຈິງໃຈ ແລະ ສິ່ງເຫຼົ່ານັ້ນບໍ່ແມ່ນການທຳທ່າເຮັດ.

ເຮົາໄດ້ປະຕິບັດ ແລະ ເວົ້າທົ່ວຍຸກຕ່າງໆ, ແຕ່ບໍ່ມີມະນຸດຄົນໃດເຄີຍໄດ້ຍິນຖ້ອຍຄຳດັ່ງກ່າວທີ່ເຮົາໄດ້ເວົ້າໃນປັດຈຸບັນນີ້ ແລະ ເຂົາບໍ່ເຄີຍຊີມລົດຊາດແຫ່ງຄວາມສະຫງ່າຜ່າເຜີຍ ແລະ ການພິພາກສາຂອງເຮົາ. ເຖິງແມ່ນວ່າບາງຄົນໃນໂລກອະດີດໄດ້ຍິນເລື່ອງເລົ່າລືກ່ຽວກັບເຮົາ, ບໍ່ມີໃຜເຄີຍໄດ້ຄົ້ນພົບຂອບເຂດແຫ່ງຄວາມຮັ່ງມີຂອງເຮົາຢ່າງແທ້ຈິງ. ເຖິງແມ່ນຜູ້ຄົນໃນປັດຈຸບັນໄດ້ຍິນພຣະທຳຈາກປາກຂອງເຮົາ, ພວກເຂົາກໍຍັງບໍ່ຮູ້ຈັກວ່າ ມີຄວາມເລິກລັບຫຼາຍສໍ່າໃດໃນປາກຂອງເຮົາ ແລະ ຈຶ່ງພິຈາລະນາວ່າປາກຂອງເຮົາຄືຄວາມອຸດົມສົມບູນ. ທຸກຄົນປາຖະໜາທີ່ຈະໄດ້ຮັບບາງສິ່ງຈາກປາກຂອງເຮົາ. ບໍ່ວ່າມັນຈະເປັນຄວາມລັບຂອງລັດ ຫຼື ຄວາມເລິກລັບແຫ່ງສະຫວັນ ຫຼື ພະລັງຂອງໂລກຝ່າຍວິນຍານ ຫຼື ຈຸດໝາຍປາຍທາງຂອງມະນຸດຊາດ, ທຸກຄົນກໍປາຖະໜາທີ່ຈະຮັບເອົາສິ່ງດັ່ງກ່າວ. ສະນັ້ນ ຖ້າເຮົາຕ້ອງເຕົ້າໂຮມຄົນເຂົ້າກັນ ແລະ ເລົ່າ "ເລື່ອງ" ໃຫ້ພວກເຂົາຟັງ, ພວກເຂົາກໍຈະລຸກຈາກ "ຕຽງຄົນໄຂ້" ຂອງພວກເຂົາທັນທີເພື່ອຟັງຫົນທາງຂອງເຮົາ. ມີຫຼາຍສິ່ງເກີນໄປທີ່ຂາດເຂີນໃນມະນຸດ: ເຂົາບໍ່ພຽງແຕ່ຕ້ອງການ "ອາຫານເສີມທາງໂພສະນາການ", ແຕ່ຍິ່ງໄປກວ່ານັ້ນ ເຂົາຕ້ອງການ "ການສະໜັບສະໜູນທາງຄວາມຄິດ" ແລະ "ການສະໜອງທາງຝ່າຍວິນຍານ". ນີ້ແມ່ນສິ່ງທີ່ຂາດໃນທຸກຄົນ; ນີ້ຄື "ຄວາມເຈັບປ່ວຍ" ຂອງທຸກຄົນ. ເຮົາສະໜອງການປິ່ນປົວຄວາມເຈັບປ່ວຍໃຫ້ກັບມະນຸດເພື່ອວ່າຈະບັນລຸຜົນທີ່ດີຂຶ້ນ, ເພື່ອວ່າທຸກຄົນຈະຖືກຟື້ນຟູສູ່ສຸຂະພາບທີ່ດີ ແລະ ເພື່ອວ່າພວກເຂົາຈະກັບຄືນສູ່ປົກກະຕິຍ້ອນການປິ່ນປົວຂອງເຮົາ. ພວກເຈົ້າຊັງມັງກອນແດງໃຫຍ່ແທ້ບໍ? ພວກເຈົ້າຊັງມັນແທ້ໆ ແລະ ຢ່າງຈິງໃຈບໍ? ເປັນຫຍັງເຮົາຈຶ່ງຖາມພວກເຈົ້າຫຼາຍຄັ້ງ? ເປັນຫຍັງເຮົາຈຶ່ງຖາມຄຳຖາມນີ້ກັບພວກເຈົ້າກັບໄປກັບມາ? ແມ່ນຫຍັງຄືຮູບລັກສະນະຂອງມັງກອນແດງໃຫຍ່ທີ່ຢູ່ໃນຫົວໃຈຂອງພວກເຈົ້າ? ມັນຖືກກຳຈັດແທ້ຈິງແລ້ວບໍ? ພວກເຈົ້າບໍ່ໄດ້ພິຈາລະນາວ່າມັນເປັນບິດາຂອງພວກເຈົ້າແທ້ໆແລ້ວບໍ? ທຸກຄົນຄວນຮັບຮູ້ເຖິງເຈດຕະນາຂອງເຮົາໃນຄຳຖາມຂອງເຮົາ. ມັນບໍ່ແມ່ນເພື່ອຍົວະໃຫ້ຜູ້ຄົນໃຈຮ້າຍ ຫຼື ເພື່ອຍຸຍົງການກະບົດທ່າມກາງມະນຸດ ຫຼື ເພື່ອໃຫ້ມະນຸດຄົ້ນພົບທາງອອກຂອງເຂົາເອງ, ແຕ່ມັນແມ່ນເພື່ອເຮັດໃຫ້ທຸກຄົນປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກພັນທະນາການຂອງມັງກອນແດງໃຫຍ່. ແຕ່ທຸກຄົນບໍ່ຄວນກັງວົນ. ທຸກຄົນຈະຖືກເຮັດໃຫ້ສຳເລັດໂດຍພຣະທຳຂອງເຮົາ; ບໍ່ມີມະນຸດຄົນໃດອາດເຂົ້າຮ່ວມໄດ້ ແລະ ບໍ່ມີມະນຸດຄົນໃດສາມາດປະຕິບັດພາລະກິດທີ່ເຮົາຈະປະຕິບັດໄດ້. ເຮົາຈະປັດເປົ່າອາກາດທີ່ຢູ່ໃນທຸກຫົນແຫ່ງຂອງແຜ່ນດິນໃຫ້ສະອາດ ແລະ ກຳຈັດທຸກຮ່ອງຮອຍຂອງຜີຮ້າຍທີ່ຢູ່ເທິງແຜ່ນດິນໂລກ. ເຮົາໄດ້ເລີ່ມຕົ້ນແລ້ວ ແລະ ເຮົາຈະເລີ່ມຕົ້ນຂັ້ນຕອນທຳອິດຂອງພາລະກິດແຫ່ງການຂ້ຽນຕີຂອງເຮົາໃນສະຖານທີ່ຂອງມັງກອນແດງໃຫຍ່ອາໄສຢູ່. ສະນັ້ນ ມັນຈຶ່ງສາມາດປະຈັກໄດ້ວ່າການຂ້ຽນຕີຂອງເຮົາໄດ້ເກີດຂຶ້ນທົ່ວທັງຈັກກະວານ ແລະ ມັງກອນແດງໃຫຍ່ ແລະ ທຸກຈຳພວກຂອງວິນຍານທີ່ບໍ່ສະອາດຈະບໍ່ມີອຳນາດຫຼົບໜີຈາກການຂ້ຽນຕີຂອງເຮົາໄດ້, ຍ້ອນເຮົາເບິ່ງເຫັນໄປທົ່ວແຜ່ນດິນ. ເມື່ອພາລະກິດຂອງເຮົາທີ່ຢູ່ເທິງແຜ່ນດິນໂລກໄດ້ສຳເລັດລົງ ນັ້ນກໍຄື ເມື່ອຍຸກແຫ່ງການພິພາກສາໄດ້ມາເຖິງຈຸດຈົບແລ້ວ, ເຮົາກໍຈະຂ້ຽນຕີມັງກອນແດງໃຫຍ່ຢ່າງເປັນທາງການ. ປະຊາຊົນຂອງເຮົາຈະໄດ້ເຫັນຢ່າງແນ່ນອນເຖິງການທີ່ເຮົາຂ້ຽນຕີມັງກອນແດງໃຫຍ່ຢ່າງຊອບທຳ, ແລ້ວຈະຖອກເທຄຳສັນລະເສີນ

ຢ່າງແນ່ນອນຍ້ອນຄວາມຊອບທຳຂອງເຮົາ ແລະ ຈະຍົກຍ້ອງນາມອັນບໍລິສຸດຂອງເຮົາຕະຫຼອດໄປຢ່າງແນ່ນອນຍ້ອນຄວາມຊອບທຳຂອງເຮົາ. ສະນັ້ນ ພວກເຈົ້າຈິ່ງປະຕິບັດໜ້າທີ່ຂອງພວກເຈົ້າຢ່າງເປັນທາງການ ແລະ ຈິ່ງສັນລະເສີນເຮົາທົ່ວທັງແຜ່ນດິນຢ່າງເປັນທາງການ ຕະຫຼອດໄປເປັນນິດ!

ເມື່ອຍຸກແຫ່ງການພິພາກສາໄດ້ໄປເຖິງຈຸດສູງສຸດ, ເຮົາຈະບໍ່ຟ້າວເຮັດໃຫ້ພາລະກິດຂອງເຮົາສຳເລັດລົງ, ແຕ່ຈະຮອບຮວມຫຼັກຖານກ່ຽວກັບຍຸກແຫ່ງການຂ້ຽນຕີເຂົ້າໃສ່ພາລະກິດນັ້ນ ແລະ ເຮັດໃຫ້ຫຼັກຖານນີ້ເປັນທີ່ປະຈັກຕໍ່ປະຊາຊົນຂອງເຮົາທຸກຄົນ; ໃນສິ່ງນີ້ຈະເກີດໝາກຜົນທີ່ຍິ່ງໃຫຍ່ຫຼາຍກວ່າ. ຫຼັກຖານນີ້ແມ່ນວິທີທີ່ເຮົາຂ້ຽນຕີມັງກອນແດງໃຫຍ່ ແລະ ເຮົາຈະເຮັດໃຫ້ປະຊາຊົນຂອງເຮົາເຫັນມັນດ້ວຍຕາຂອງພວກເຂົາເອງ ເພື່ອວ່າພວກເຂົາຈະຮູ້ຈັກເຖິງອຸປະນິໄສຂອງເຮົາດີຂຶ້ນ. ເວລາທີ່ປະຊາຊົນຂອງເຮົາມີຄວາມສຸກກັບເຮົາກໍເປັນເວລາທີ່ມັງກອນແດງໃຫຍ່ຖືກຂ້ຽນຕີ. ການເຮັດໃຫ້ປະຊາຊົນຂອງມັງກອນແດງໃຫຍ່ລຸກຂຶ້ນ ແລະ ກະບົດຕໍ່ມັນແມ່ນແຜນການຂອງເຮົາ ແລະ ນີ້ເປັນວິທີທີ່ເຮົາຈະເຮັດໃຫ້ປະຊາຊົນຂອງເຮົາສົມບູນ ແລະ ມັນເປັນໂອກາດທີ່ຍິ່ງໃຫຍ່ສຳລັບປະຊາຊົນຂອງເຮົາທຸກຄົນທີ່ຈະເຕີບໃຫຍ່ໃນຊີວິດ. ເມື່ອເດືອນແຈ້ງສະຫວ່າງຂຶ້ນ, ຄືນທີ່ງຽບສະຫງົບກໍພັງທະລາຍລົງທັນທີ. ເຖິງແມ່ນດວງເດືອນຈະບໍ່ເຕັມດວງ, ມະນຸດກໍມີອາລົມສົດໃສ ແລະ ນັ່ງຢູ່ຢ່າງສະຫງົບພາຍໃຕ້ແສງເດືອນ, ຊົມຊື່ນພາບອັນງົດງາມຢູ່ຂ້າງແສງເດືອນ. ມະນຸດບໍ່ສາມາດບັນລະຍາຍຄວາມຮູ້ສຶກຂອງເຂົາໄດ້; ມັນຄືກັບວ່າເຂົາປາຖະໜາທີ່ຈະໂຍນຄວາມຄິດຂອງເຂົາກັບໄປສູ່ອະດີດຄືນ, ຄືກັບວ່າເຂົາປາຖະໜາທີ່ຈະເບິ່ງຫາອະນາຄົດຂ້າງໜ້າ, ຄືກັບວ່າເຂົາກຳລັງມີຄວາມສຸກກັບປັດຈຸບັນ. ຮອຍຍິ້ມປາກົດຂຶ້ນໃນໃບໜ້າຂອງເຂົາ ແລະ ທ່າມກາງອາກາດທີ່ງົດງາມກໍມີກິ່ນຫອມທີ່ສົດຊື່ນແຊກຊຶມເຂົ້າໄປ; ໃນຂະນະທີ່ລົມເບົາໆເລີ່ມພັດມາ, ມະນຸດກໍສັງເກດເຖິງກິ່ນຫອມຢ່າງແຮງ ແລະ ມັນກໍຄືກັບວ່າເຂົາມືນເມົາກັບສິ່ງນັ້ນ, ບໍ່ສາມາດປຸກຕົນເອງໃຫ້ຕື່ນໄດ້. ນີ້ແມ່ນເວລາທີ່ເຮົາໄດ້ມາທ່າມກາງມະນຸດເປັນການສ່ວນຕົວຢ່າງແທ້ຈິງ ແລະ ມະນຸດກໍມີຄວາມຮູ້ສຶກເຖິງກິ່ນຫອມນັ້ນຫຼາຍຂຶ້ນ ແລະ ມະນຸດທຸກຄົນກໍດຳລົງຊີວິດທ່າມກາງກິ່ນຫອມນີ້. ເຮົາຢູ່ກັບມະນຸດຢ່າງສະຫງົບສຸກ, ເຂົາດຳລົງຊີວິດດ້ວຍຄວາມປອງດອງກັບເຮົາ, ເຂົາບໍ່ອອກນອກຮູ້ນອກທາງອີກຕໍ່ໄປໃນເວລາທີ່ເຂົາເບິ່ງເຮົາ, ເຮົາບໍ່ລິຮານຂໍ້ບົກຜ່ອງຂອງມະນຸດອີກຕໍ່ໄປ, ບໍ່ມີສີໜ້າໂສກເສົ້າເທິງໃບໜ້າຂອງມະນຸດອີກຕໍ່ໄປ ແລະ ຄວາມຕາຍກໍບໍ່ຂົ່ມຂູ່ມະນຸດຊາດທັງປວງອີກຕໍ່ໄປ. ໃນປັດຈຸບັນນີ້, ເຮົາຄືບໜ້າໄປພ້ອມກັບມະນຸດສູ່ຍຸກແຫ່ງການຂ້ຽນຕີ, ກ່າວເດີນໄປຂ້າງໜ້າຄຽງຄູ່ກັບເຂົາ. ເຮົາກຳລັງປະຕິບັດພາລະກິດຂອງເຮົາ ເຊິ່ງໝາຍຄວາມວ່າ ເຮົາໂຈມຕີທ່າມກາງມະນຸດດ້ວຍໄມ້ຄ້ອນຂອງເຮົາ ແລະ ມັນກໍຟາດລົງໃສ່ຄວາມກະບົດໃນຕົວມະນຸດ. ໃນສາຍຕາຂອງມະນຸດ, ໄມ້ຄ້ອນຂອງເຮົາເບິ່ງຄືກັບວ່າມີພະລັງພິເສດ: ມັນຟາດໃສ່ທຸກຄົນທີ່ເປັນສັດຕູຂອງເຮົາ ແລະ ບໍ່ປ່ອຍພວກເຂົາໄປຢ່າງງ່າຍດາຍ; ໄມ້ຄ້ອນນັ້ນແມ່ນເຮັດໜ້າທີ່ຕາມທຳມະຊາດຂອງມັນທ່າມກາງທຸກຄົນທີ່ຕໍ່ຕ້ານເຮົາ; ທຸກຄົນທີ່ຢູ່ໃນກຳມືຂອງເຮົາແມ່ນປະຕິບັດໜ້າທີ່ຂອງພວກເຂົາຕາມເຈດຕະນາຂອງເຮົາ ແລະ ພວກເຂົາບໍ່ເຄີຍຂັດຂືນຄວາມປາຖະໜາຂອງເຮົາ ຫຼື ປ່ຽນແປງແກ່ນແທ້ຂອງພວກເຂົາຈັກເທື່ອ. ຜົນຕາມມາກໍຄື ນໍ້າຈະແຜດສຽງດັງກ້ອງ, ພູເຂົາຈະພັງ

ທະລາຍລົງ, ແມ່ນໍ້າທີ່ຍິ່ງໃຫຍ່ຈະແຕກສະຫຼາຍ, ມະນຸດຈະບໍ່ໄດ້ຮັບການປ່ຽນແປງຈັກເທື່ອ, ດວງຕາເວັນຈະເລີ່ມມືດລົງ, ດວງເດືອນຈະມືດລົງ, ມະນຸດຈະບໍ່ມີມື້ທີ່ຈະໄດ້ດຳລົງຊີວິດຢ່າງສະຫງົບສຸກອີກຕໍ່ໄປ, ຈະບໍ່ມີເວລາແຫ່ງຄວາມສະຫງົບສຸກເທິງແຜ່ນດິນໂລກອີກຕໍ່ໄປ, ສະຫວັນຈະບໍ່ສະຫງົບ ແລະ ມິດງຽບອີກຈັກເທື່ອ ແລະ ຈະບໍ່ອົດກັ້ນອີກຕໍ່ໄປ. ທຸກສິ່ງຈະຖືກສ້າງໃໝ່ ແລະ ຈະຟື້ນຟູໃຫ້ເປັນຮູບແບບໃນລັກສະນະດັ່ງເດີມຂອງພວກມັນ. ທຸກຄົວເຮືອນເທິງແຜ່ນດິນໂລກຈະຖືກເຮັດໃຫ້ແຕກອອກຈາກກັນ ແລະ ປະຊາຊາດທັງປວງເທິງແຜ່ນດິນໂລກຈະຖືກເຮັດໃຫ້ແຕກຂາດສະບັ້ນ; ມື້ທີ່ຜົວ ແລະ ເມຍຈະກັບຄືນຫາກັນແມ່ນຈະຫາຍຈາກໄປ, ແມ່ ແລະ ລູກຊາຍຈະບໍ່ໄດ້ພົບກັນອີກຕໍ່ໄປ, ຈະບໍ່ມີການຢູ່ຮ່ວມກັນລະຫວ່າງພໍ່ ແລະ ລູກສາວອີກຕໍ່ໄປ. ທຸກສິ່ງທີ່ເຄີຍຢູ່ເທິງແຜ່ນດິນໂລກຈະຖືກເຮົາເຮັດໃຫ້ແຕກຫັກ. ເຮົາບໍ່ໃຫ້ໂອກາດກັບຜູ້ຄົນໄດ້ປ່ອຍຄວາມຮູ້ສຶກຂອງພວກເຂົາ, ຍ້ອນເຮົາໄຮ້ຄວາມຮູ້ສຶກ ແລະ ໄດ້ເລີ່ມກຽດຊັງຄວາມຮູ້ສຶກຂອງຜູ້ຄົນຫຼາຍທີ່ສຸດ. ມັນເປັນຍ້ອນຄວາມຮູ້ສຶກທ່າມກາງຜູ້ຄົນ ທີ່ເຮົາຖືກປ່ອຍປະ ແລະ ສຸດທ້າຍ ເຮົາກໍກາຍເປັນ “ຄົນອື່ນ” ໃນສາຍຕາຂອງພວກເຂົາ; ມັນເປັນຍ້ອນຄວາມຮູ້ລະຫວ່າງຜູ້ຄົນ ເຮົາຈຶ່ງຖືກລືມ; ມັນເປັນຍ້ອນຄວາມຮູ້ສຶກຂອງມະນຸດ ເຂົາຈຶ່ງສວຍໂອກາດຮູ້ຈັກ “ຄວາມສຳນຶກ” ຂອງເຂົາ; ມັນເປັນຍ້ອນຄວາມຮູ້ສຶກຂອງມະນຸດ ເຂົາຈຶ່ງເບື່ອໜ່າຍກັບການຂ້ຽນຕີຂອງເຮົາຢູ່ສະເໝີ; ມັນເປັນຍ້ອນຄວາມຮູ້ສຶກຂອງມະນຸດ ເຂົາຈຶ່ງຮ້ອງເຮົາວ່າບໍ່ເປັນທຳ ແລະ ບໍ່ຍຸຕິທຳ ແລະ ເວົ້າວ່າເຮົາບໍ່ສົນໃຈຕໍ່ຄວາມຮູ້ສຶກຂອງມະນຸດໃນການຈັດການສິ່ງຕ່າງໆ. ເຮົາມີຍາດພີ່ນ້ອງເທິງແຜ່ນດິນໂລກເຊັ່ນກັນບໍ? ຜູ້ໃດເຄີຍເຮັດວຽກໜັກໝົດມື້ໝົດຄືນຄືກັບເຮົາ ໂດຍບໍ່ຄິດເຖິງອາຫານ ຫຼື ການຫຼັບນອນ, ຍ້ອນເຫັນແກ່ແຜນການຄຸ້ມຄອງທັງໝົດຂອງເຮົາບໍ່? ມະນຸດຈະສາມາດທຽບກັບພຣະເຈົ້າໄດ້ແນວໃດ? ມະນຸດຈະເຂົ້າກັນກັບພຣະເຈົ້າໄດ້ແນວໃດ? ພຣະເຈົ້າຜູ້ທີ່ຊົງສ້າງຈະເປັນຄືກັບມະນຸດທີ່ຖືກສ້າງໄດ້ແນວໃດ? ເຮົາຈະດຳລົງຊີວິດ ແລະ ປະພຶດຮ່ວມກັບມະນຸດເທິງແຜ່ນດິນໂລກຢູ່ສະເໝີໄດ້ແນວໃດ? ມີໃຜແດ່ທີ່ສາມາດຮູ້ສຶກເປັນຫ່ວງຫົວໃຈຂອງເຮົາ? ມັນຄືຄຳອະທິຖານຂອງມະນຸດບໍ? ຄັ້ງໜຶ່ງເຮົາເຄີຍຕົກລົງຮ່ວມກັບມະນຸດ ແລະ ຍ່າງໄປພ້ອມກັນກັບເຂົາ ແລະ ແລ້ວຈົນເຖິງປັດຈຸບັນນີ້ມະນຸດກໍໄດ້ດຳລົງຊີວິດຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຂອງເຮົາ, ແຕ່ຈະມີມື້ໃດບໍ ທີ່ມະນຸດຈະສາມາດແຍກຕົວເອງອອກຈາກການດູແລຂອງເຮົາ? ເຖິງແມ່ນວ່າມະນຸດບໍ່ເຄີຍມີພາລະໃນການສົນໃຈຫົວໃຈຂອງເຮົາ ແລ້ວແມ່ນໃຜສາມາດສືບຕໍ່ດຳລົງຊີວິດໃນດິນແດນທີ່ບໍ່ມີແສງສະຫວ່າງນີ້? ມັນເປັນຍ້ອນການອວຍພອນຂອງເຮົາ ມະນຸດຈຶ່ງໄດ້ດຳລົງຊີວິດຈົນເຖິງປັດຈຸບັນນີ້.

ວັນທີ 4 ເມສາ 1992

# ບົດທີ 29

ໃນມື້ທີ່ທຸກສິ່ງຖືກເຮັດໃຫ້ຟື້ນຄືນຊີບ, ເຮົາໄດ້ລົງມາຢູ່ທ່າມກາງມະນຸດ ແລະ ເຮົາໄດ້ໃຊ້ເວລາທັງກາງເວັນ ແລະ ກາງຄືນຢ່າງມະຫັດສະຈັນກັບເຂົາ. ມີແຕ່ໃນເວລານີ້ເທົ່ານັ້ນ ມະນຸດຈຶ່ງຮູ້ສຶກເຖິງຄວາມສາມາດເຂົ້າເຖິງຂອງເຮົາໜ້ອຍໜຶ່ງ ແລະ ເມື່ອການປະຕິສຳພັນຂອງເຂົາກັບເຮົາມີຫຼາຍຂຶ້ນ, ເຂົາຈຶ່ງເຫັນເຖິງບາງສິ່ງທີ່ເຮົາມີ ແລະ ເປັນ ເຊິ່ງດ້ວຍເຫດນັ້ນ ຜົນຕາມມາກໍຄື ເຂົາໄດ້ຮັບຄວາມຮູ້ບາງຢ່າງກ່ຽວກັບເຮົາ. ໃນທ່າມກາງບັນດາຄົນທັງປວງ, ເຮົາໄດ້ເງີຍຫົວຂຶ້ນ ແລະ ເຝົ້າເບິ່ງ ແລະ ພວກເຂົາທຸກຄົນກໍເຫັນເຮົາ. ແຕ່ເມື່ອໄພພິບັດເກີດຂຶ້ນເທິງແຜ່ນດິນໂລກ, ພວກເຂົາກໍເປັນກັງວົນທັນທີ ແລະ ພາບຫຼັກຂອງເຮົາກໍຫາຍໄປຈາກຫົວໃຈຂອງພວກເຂົາ; ຕື່ນຕົກໃຈຍ້ອນການມາຂອງໄພພິບັດ, ພວກເຂົາບໍ່ສົນໃຈການຕັກເຕືອນຂອງເຮົາເລີຍ. ເປັນເວລາຫຼາຍປີທີ່ເຮົາໄດ້ຍ່າງຜ່ານທ່າມກາງມະນຸດ, ແຕ່ເຂົາກໍຍັງບໍ່ຮູ້ສຶກຕົວສະເໝີ ແລະ ບໍ່ຮູ້ຈັກເຮົາຈັກເທື່ອ. ໃນປັດຈຸບັນ ເຮົາບອກສິ່ງນີ້ໃຫ້ແກ່ເຂົາດ້ວຍປາກຂອງເຮົາເອງ ແລະ ເຮັດໃຫ້ທຸກຄົນມາຢູ່ຕໍ່ໜ້າເຮົາເພື່ອຮັບເອົາບາງສິ່ງຈາກເຮົາ, ແຕ່ພວກເຂົາກໍຍັງຫ່າງເຫີນຈາກເຮົາ ແລະ ສະນັ້ນ ພວກເຂົາຈຶ່ງບໍ່ຮູ້ຈັກເຮົາ. ເມື່ອບາດກ້າວຂອງເຮົາກ້າວໄປຂ້າມຈັກກະວານ ແລະ ສົ້ນປາຍຂອງແຜ່ນດິນໂລກ, ມະນຸດຈະເລີ່ມໄຕ່ຕອງກ່ຽວກັບຕົນເອງ ແລະ ທຸກຄົນຈະມາຫາເຮົາ ແລະ ກົ້ມລົງຕໍ່ໜ້າເຮົາ ແລະ ນະມັດສະການເຮົາ. ນີ້ຈະເປັນມື້ທີ່ເຮົາໄດ້ຮັບສະຫງ່າລາສີ, ມື້ທີ່ເຮົາກັບມາ ແລະ ຍັງເປັນມື້ທີ່ເຮົາຈາກໄປອີກດ້ວຍ. ບັດນີ້ ເຮົາໄດ້ເລີ່ມຕົ້ນພາລະກິດຂອງເຮົາທ່າມກາງມະນຸດທັງປວງ, ເລີ່ມລົງມືເຮັດຢ່າງເປັນທາງການ, ທົ່ວຈັກກະວານທັງປວງ ແລະ ໃນຂັ້ນສຸດທ້າຍຂອງແຜນການຄຸ້ມຄອງຂອງເຮົາ. ຈາກຊ່ວງເວລານີ້ເປັນຕົ້ນໄປ, ໃຜກໍຕາມທີ່ບໍ່ລະມັດລະວັງຈະຖືກໂຍນລົງທ່າມກາງການຂ້ຽນຕີທີ່ໂຫດຮ້າຍ ແລະ ສິ່ງນີ້ອາດເກີດຂຶ້ນໄດ້ທຸກເວລາ. ນີ້ບໍ່ແມ່ນຍ້ອນວ່າເຮົາບໍ່ມີຫົວໃຈ; ກົງກັນຂ້າມ, ມັນເປັນຂັ້ນຕອນຂອງແຜນການຄຸ້ມຄອງຂອງເຮົາ; ທຸກສິ່ງຕ້ອງເປັນໄປຕາມຂັ້ນຕອນຂອງພາລະກິດຂອງເຮົາ ແລະ ບໍ່ມີມະນຸດຄົນໃດສາມາດປ່ຽນແປງມັນໄດ້. ເມື່ອເຮົາເລີ່ມຕົ້ນແຜນການຂອງເຮົາຢ່າງເປັນທາງການ, ທຸກຄົນເຄື່ອນຍ້າຍ ເມື່ອເຮົາເຄື່ອນຍ້າຍ, ຜູ້ຄົນທົ່ວຈັກກະວານພາກັນຫຍຸ້ງກັບການກ້າວໄປກັບເຮົາ, ມີ “ຄວາມປິຕິຍິນດີ” ທົ່ວຈັກກະວານ ແລະ ເຮົາໄດ້ກະຕຸ້ນໃຫ້ມະນຸດກ້າວໄປຂ້າງໜ້າ. ຜົນຕາມມາກໍຄື ມັງກອນແດງທີ່ຍິ່ງໃຫຍ່ໄດ້ຖືກເຮົາຂ້ຽນຕີໃຫ້ຕົກສູ່ສະພາບສັບສົນລະວົນ ແລະ ສັບສົນ ແລະ ມັນຮັບໃຊ້ພາລະກິດຂອງເຮົາ ແລະ ເຖິງວ່າຈະບໍ່ເຕັມໃຈ ມັນກໍບໍ່ສາມາດປະຕິບັດຕາມຄວາມປາຖະໜາຂອງມັນເອງໄດ້, ແຕ່ກໍບໍ່ມີທາງເລືອກນອກຈາກຈະຍອມຢູ່ພາຍໃຕ້ການຄວບຄຸມຂອງເຮົາ. ໃນແຜນການທັງໝົດຂອງເຮົາ, ມັງກອນແດງທີ່ຍິ່ງໃຫຍ່ຄືຜູ້ຂັດຂວາງເຮົາ, ເປັນສັດຕູຂອງເຮົາ ແລະ ຍັງເປັນຜູ້ຮັບໃຊ້ເຮົາ; ເມື່ອເປັນດັ່ງນັ້ນ ເຮົາຈຶ່ງບໍ່ເຄີຍຜ່ອນຜັນ “ເງື່ອນໄຂ” ທີ່ເຮົາຮຽກຮ້ອງຈາກມັນຈັກເທື່ອ. ສະນັ້ນ ຂັ້ນຕອນສຸດທ້າຍຂອງພາລະກິດຂອງການບັງເກີດເປັນມະນຸດຂອງເຮົາແມ່ນຖືກເຮັດໃຫ້ສຳເລັດໃນຄົວເຮືອນຂອງມັນ. ໃນວິທີນັ້ນ, ມັງກອນແດງທີ່ຍິ່ງໃຫຍ່ຈຶ່ງສາມາດຮັບໃຊ້ບໍລິການເຮົາໄດ້ຢ່າງເໝາະສົມຍິ່ງຂຶ້ນ ເຊິ່ງເຮັດໃຫ້ເຮົາເອົາຊະນະມັນ

ແລະ ເຮັດໃຫ້ແຜນການຂອງເຮົາສຳເລັດ. ເມື່ອເຮົາປະຕິບັດພາລະກິດ, ທູດສະຫວັນທຸກຕົນກໍເລີ່ມຕົ້ນຕໍ່ສູ້ຢ່າງຊີ້ຂາດໄປກັບເຮົາ ແລະ ຕັ້ງໃຈເຮັດໃຫ້ຄວາມປາຖະໜາຂອງເຮົາສຳເລັດໃນຂັ້ນຕອນສຸດທ້າຍ, ເພື່ອວ່າຜູ້ຄົນເທິງແຜ່ນດິນໂລກຈະຍອມຢູ່ຕໍ່ໜ້າເຮົາຄືກັບທູດສະຫວັນ ແລະ ບໍ່ມີຄວາມປາຖະໜາທີ່ຈະຕໍ່ຕ້ານເຮົາ ແລະ ບໍ່ເຮັດສິ່ງໃດທີ່ເປັນການກະບົດຕໍ່ເຮົາ. ສິ່ງເຫຼົ່ານີ້ແມ່ນພະລັງຂອງພາລະກິດຂອງເຮົາທົ່ວທັງຈັກກະວານ.

ເປົ້າໝາຍ ແລະ ຄວາມໝາຍຂອງການມາເຖິງຂອງເຮົາທ່າມກາງມະນຸດແມ່ນເພື່ອຊ່ວຍມະນຸດຊາດທັງປວງໃຫ້ລອດພົ້ນ, ເພື່ອນຳພາມະນຸດຊາດທັງປວງກັບຄືນສູ່ຄົວເຮືອນຂອງເຮົາ, ເພື່ອຮ່ວມສະຫວັນກັບແຜ່ນດິນໂລກຄືນໃໝ່ ແລະ ເພື່ອເຮັດໃຫ້ມະນຸດສົ່ງ "ສັນຍານ" ລະຫວ່າງສະຫວັນ ແລະ ແຜ່ນດິນໂລກ, ຍ້ອນສິ່ງດັ່ງກ່າວແມ່ນໜ້າທີ່ໂດຍທຳມະຊາດຂອງມະນຸດ. ໃນເວລາທີ່ເຮົາສ້າງມະນຸດຊາດ, ເຮົາໄດ້ເຮັດໃຫ້ທຸກສິ່ງພ້ອມພ້ອມສຳລັບມະນຸດຊາດ ແລະ ຕໍ່ມາ ເຮົາໄດ້ຍອມໃຫ້ມະນຸດຊາດຮັບເອົາຄວາມອຸດົມສົມບູນທີ່ເຮົາໄດ້ມອບໃຫ້ກັບເຂົາຕາມເງື່ອນໄຂຂອງເຮົາ. ສະນັ້ນ ເຮົາຈຶ່ງເວົ້າວ່າ ມັນແມ່ນຢູ່ພາຍໃຕ້ການນຳພາຂອງເຮົາ ມະນຸດຊາດທັງປວງຈຶ່ງລອດມາເຖິງປັດຈຸບັນ. ສິ່ງນີ້ລແມ່ນແຜນການຂອງເຮົາ. ໃນທ່າມກາງມະນຸດຊາດທັງປວງ, ຜູ້ຄົນຈຳນວນນັບບໍ່ຖ້ວນດຳລົງຢູ່ພາຍໃຕ້ການປົກປ້ອງແຫ່ງຄວາມຮັກຂອງເຮົາ ແລະ ຜູ້ຄົນຈຳນວນນັບບໍ່ຖ້ວນຢູ່ພາຍໃຕ້ການຂ້ຽນຕີແຫ່ງຄວາມກຽດຊັງຂອງເຮົາ. ເຖິງແມ່ນທຸກຄົນອະທິຖານຕໍ່ເຮົາ, ພວກເຂົາກໍຍັງບໍ່ສາມາດປ່ຽນແປງສະຖານະການໃນປັດຈຸບັນຂອງພວກເຂົາໄດ້; ຫຼັງຈາກທີ່ພວກເຂົາໄດ້ສູນເສຍຄວາມຫວັງ, ພວກເຂົາກໍໄດ້ແຕ່ປ່ອຍໃຫ້ເປັນໄປຕາມທຳມະຊາດຂອງມັນ ແລະ ຫັນມາເຊື່ອຟັງເຮົາ, ເພາະນີ້ຄືສິ່ງດຽວທີ່ມະນຸດຊາດສາມາດເຮັດສຳເລັດໄດ້. ເມື່ອເວົ້າເຖິງສະພາວະຊີວິດຂອງມະນຸດ, ມະນຸດຍັງບໍ່ທັນຄົ້ນພົບຊີວິດຢ່າງແທ້ຈິງເທື່ອ, ເຂົາຍັງເບິ່ງບໍ່ເຫັນຄວາມບໍ່ຍຸຕິທຳ, ຄວາມສິ້ນຫວັງ ແລະ ສະພາບການທີ່ທຸກທໍລະມານເທິງແຜ່ນດິນໂລກ ແລະ ສະນັ້ນ ຖ້າບໍ່ແມ່ນຍ້ອນການມາຂອງໄພພິບັດ, ຄົນສ່ວນໃຫຍ່ກໍຍັງຈະຮັບເອົາອຳນາດແຫ່ງທຳມະຊາດ ແລະ ຍັງຈະໝົກມຸ້ນຕົນເອງກັບລົດຊາດຂອງ "ຊີວິດ". ນີ້ບໍ່ແມ່ນຄວາມເປັນຈິງໃນໂລກບໍ? ນີ້ບໍ່ແມ່ນສຽງແຫ່ງຄວາມລອດພົ້ນທີ່ເຮົາກ່າວຕໍ່ມະນຸດບໍ? ເປັນຫຍັງໃນທ່າມກາງມະນຸດຊາດຈຶ່ງບໍ່ມີຜູ້ໃດຮັກເຮົາຢ່າງແທ້ຈິງເລີຍ? ເປັນຫຍັງມະນຸດຈຶ່ງຮັກເຮົາພຽງແຕ່ເມື່ອຢູ່ໃນທ່າມກາງການຂ້ຽນຕີ ແລະ ການທົດລອງ, ແຕ່ບໍ່ມີຜູ້ໃດຮັກເຮົາໃນຂະນະທີ່ຢູ່ພາຍໃຕ້ການປົກປ້ອງຂອງເຮົາ? ເຮົາໄດ້ປະທານການຂ້ຽນຕີຂອງເຮົາໃຫ້ກັບມະນຸດຊາດຫຼາຍຄັ້ງ. ພວກເຂົາຫຼຽວເບິ່ງມັນ, ແຕ່ແລ້ວກໍບໍ່ຫົວຊາມັນ ແລະ ພວກເຂົາບໍ່ສຶກສາ ແລະ ໄຕ່ຕອງມັນໃນເວລານີ້ ແລະ ສະນັ້ນສິ່ງທີ່ເກີດຂຶ້ນກັບມະນຸດຈຶ່ງມີແຕ່ການພິພາກສາຢ່າງໂຫດຮ້າຍ. ນີ້ເປັນພຽງໜຶ່ງໃນວິທີການປະຕິບັດພາລະກິດຂອງເຮົາ, ແຕ່ມັນແມ່ນເພື່ອປ່ຽນແປງມະນຸດ ແລະ ເຮັດໃຫ້ເຂົາຮັກເຮົາອີກດ້ວຍ.

ເຮົາປົກຄອງໃນອານາຈັກ ແລະ ຍິ່ງໄປກວ່ານັ້ນ ເຮົາປົກຄອງທົ່ວຈັກກະວານທັງປວງ; ເຮົາເປັນທັງກະສັດ ແລະ ຫົວໜ້າຂອງຈັກກະວານ. ຕັ້ງແຕ່ເວລານີ້ເປັນຕົ້ນໄປ, ເຮົາຈະຮອບຮວມທຸກຄົນທີ່ບໍ່ແມ່ນຄົນຖືກເລືອກ ແລະ ຈະເລີ່ມຕົ້ນພາລະກິດຂອງເຮົາທ່າມກາງຄົນຕ່າງຊາດ ແລະ ເຮົາຈະປະກາດ

ບົດບັນຍັດແຫ່ງການບໍລິຫານຂອງເຮົາຕໍ່ຈັກກະວານທັງປວງ, ເພື່ອວ່າເຮົາຈະເລີ່ມຕົ້ນຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາໄດ້ຢ່າງສຳເລັດ. ເຮົາຈະໃຊ້ການຂ້ຽນຕີເພື່ອເຜີຍແຜ່ພາລະກິດຂອງເຮົາທ່າມກາງຄົນຕ່າງຊາດ, ນັ້ນໝາຍຄວາມວ່າ ເຮົາຈະໃຊ້ກຳລັງຕໍ່ທຸກຄົນທີ່ເປັນຄົນຕ່າງຊາດ. ໂດຍທຳມະຊາດແລ້ວ ພາລະກິດນີ້ຈະຖືກປະຕິບັດໃນເວລາດຽວກັບພາລະກິດຂອງເຮົາທ່າມກາງຄົນຖືກເລືອກ. ເມື່ອຜູ້ຄົນຂອງເຮົາປົກຄອງ ແລະ ມີອຳນາດເທິງແຜ່ນດິນໂລກຈະເປັນມື້ທີ່ທຸກຄົນເທິງແຜ່ນດິນໂລກໄດ້ຖືກເອົາຊະນະອີກດ້ວຍ ແລະ ຍິ່ງໄປກວ່ານັ້ນ ມັນກໍຈະເປັນເວລາທີ່ເຮົາພັກເຊົາ ແລະ ເມື່ອນັ້ນ ເຮົາຈຶ່ງຈະປາກົດຕົວຕໍ່ທຸກຄົນທີ່ຖືກເອົາຊະນະ. ເຮົາປາກົດຕົວຕໍ່ອານາຈັກທີ່ບໍລິສຸດ ແລະ ເຊື່ອງຕົນເອງຈາກດິນແດນທີ່ສົກກະປົກ. ທຸກຄົນທີ່ຖືກເອົາຊະນະ ແລະ ເຊື່ອຟັງຢູ່ຕໍ່ໜ້າເຮົາແມ່ນສາມາດເຫັນໜ້າຂອງເຮົາດ້ວຍຕາຂອງພວກເຂົາເອງ ແລະ ສາມາດໄດ້ຍິນສຽງຂອງເຮົາດ້ວຍຫູຂອງພວກເຂົາເອງ. ນີ້ແມ່ນພອນຂອງຄົນທີ່ເກີດໃນລະຫວ່າງຍຸກສຸດທ້າຍ, ນີ້ແມ່ນພອນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແລະ ມະນຸດບໍ່ສາມາດປ່ຽນແປງສິ່ງນີ້ໄດ້. ໃນປັດຈຸບັນ, ເຮົາປະຕິບັດພາລະກິດໃນລັກສະນະນີ້ກໍເພື່ອພາລະກິດໃນອະນາຄົດ. ພາລະກິດທັງໝົດຂອງເຮົາແມ່ນກ່ຽວພັນກັນ ໂດຍພາລະກິດທັງໝົດແມ່ນການເອີ້ນ ແລະ ການຂານຕອບ: ບໍ່ເຄີຍມີຂັ້ນຕອນໃດຢຸດສະງັກຢ່າງກະທັນຫັນຈັກເທື່ອ ແລະ ບໍ່ເຄີຍມີຂັ້ນຕອນໃດຖືກປະຕິບັດຢ່າງເປັນອິດສະຫຼະຈາກຂັ້ນຕອນອື່ນຈັກເທື່ອ. ແລ້ວມັນບໍ່ແມ່ນແບບນັ້ນບໍ? ພາລະກິດໃນອະດີດບໍ່ແມ່ນພື້ນຖານຂອງພາລະກິດໃນປັດຈຸບັນບໍ? ພຣະທຳທີ່ຢູ່ໃນອະດີດບໍ່ແມ່ນສິ່ງທີ່ມາກ່ອນພຣະທຳໃນປັດຈຸບັນບໍ? ຂັ້ນຕອນທີ່ຢູ່ໃນອະດີດບໍ່ແມ່ນຕົ້ນກຳເນີດຂອງຂັ້ນຕອນໃນປັດຈຸບັນບໍ? ເມື່ອເຮົາມາຍໜັງສືມ້ວນອອກຢ່າງເປັນທາງການກໍຄືເວລາທີ່ຜູ້ຄົນທົ່ວທັງຈັກກະວານຖືກຂ້ຽນຕີ, ແມ່ນເວລາທີ່ທຸກຄົນທົ່ວແຜ່ນດິນໂລກຕົກຢູ່ໃນການທົດລອງ ແລະ ມັນແມ່ນຈຸດສູງສຸດຂອງພາລະກິດຂອງເຮົາ; ທຸກຄົນດຳລົງຊີວິດຢູ່ໃນດິນແດນທີ່ປາສະຈາກແສງສະຫວ່າງ ແລະ ທຸກຄົນດຳລົງຊີວິດຢູ່ທ່າມກາງໄພຂົ່ມຂູ່ຂອງສະພາບແວດລ້ອມຂອງພວກເຂົາ. ເວົ້າອີກຢ່າງໜຶ່ງກໍຄື ມັນເປັນຊີວິດທີ່ມະນຸດບໍ່ເຄີຍຜະເຊີນຕັ້ງແຕ່ເວລາແຫ່ງການເນລະມິດສ້າງຈົນເຖິງປັດຈຸບັນ ແລະ ບໍ່ມີໃຜທົ່ວຍຸກຕ່າງໆເຄີຍ "ໄດ້ຮັບ" ຊີວິດປະເພດນີ້ ແລະ ສະນັ້ນ ເຮົາຈຶ່ງເວົ້າວ່າ ເຮົາໄດ້ປະຕິບັດພາລະກິດທີ່ບໍ່ເຄີຍປະຕິບັດມາກ່ອນ. ນີ້ແມ່ນສະພາວະທີ່ແທ້ຈິງຂອງວຽກງານຕ່າງໆ ແລະ ນີ້ແມ່ນຄວາມໝາຍທີ່ແທ້ຈິງ. ເພາະວ່າມື້ຂອງເຮົາຫຍັບເຂົ້າໃກ້ມະນຸດຊາດທັງປວງ, ຍ້ອນມັນເບິ່ງຄືກັບວ່າບໍ່ໄດ້ຢູ່ໄກ, ແຕ່ມັນຢູ່ຕໍ່ໜ້າຕໍ່ຕາມະນຸດເອງ, ເປັນເຊັ່ນນັ້ນແລ້ວ ຜູ້ໃດຈະບໍ່ຢ້ານ? ແລ້ວຜູ້ໃດຈະບໍ່ຊື່ນຊົມໃນສິ່ງນີ້? ນະຄອນບາບີໂລນທີ່ສົກກະປົກ ໃນທີ່ສຸດກໍໄດ້ມາເຖິງຈຸດສຸດທ້າຍຂອງມັນແລ້ວ; ມະນຸດໄດ້ພົບກັບໂລກທີ່ໃໝ່ຫຼ້າສຸດອີກຄັ້ງ ແລະ ສະຫວັນ ແລະ ແຜ່ນດິນໂລກໄດ້ຖືກປ່ຽນແປງ ແລະ ສ້າງຄືນໃໝ່.

ເມື່ອເຮົາປາກົດຕົວຕໍ່ບັນດາປະຊາຊາດ ແລະ ປະຊາຊົນທັງປວງ, ກ້ອນເມກຂາວກໍເລື່ອນລອຍຢູ່ໃນທ້ອງຟ້າ ແລະ ປົກຄຸມເຮົາໄວ້. ເຊັ່ນດຽວກັນ ນົກທີ່ຢູ່ເທິງແຜ່ນດິນໂລກກໍຮ້ອງສິ່ງ ແລະ ເຕັ້ນດ້ວຍຄວາມປິຕິຍິນດີສຳລັບເຮົາ, ບົ່ງຊີ້ເຖິງບັນຍາກາດເທິງແຜ່ນດິນໂລກ ແລະ ສະນັ້ນຈຶ່ງເຮັດໃຫ້ທຸກສິ່ງເທິງແຜ່ນດິນໂລກກັບມາມີຊີວິດຊີວາ, ບໍ່ "ໄຫຼລົງຢ່າງຊ້າໆ" ອີກຕໍ່ໄປ ແຕ່ກົງກັນຂ້າມເປັນການ

ດຳລົງຊີວິດຢູ່ທ່າມກາງບັນຍາກາດທີ່ມີຊີວິດຊີວາ. ເມື່ອເຮົາຢູ່ທ່າມກາງກ້ອນເມກ, ມະນຸດກໍເບິ່ງເຫັນໜ້າເຮົາ ແລະ ຕາຂອງເຮົາແບບມົວໆ ແລະ ໃນເວລານີ້ ເຂົາກໍຮູ້ສຶກຢ້ານກົວໜ້ອຍໜຶ່ງ. ໃນອະດີດເຂົາໄດ້ຍິນການບັນທຶກທາງປະຫວັດສາດກ່ຽວກັບເຮົາໃນຕຳນານ ແລະ ຜົນຕາມມາກໍຄືເຂົາພຽງແຕ່ເຊື່ອເຄິ່ງໜຶ່ງ ແລະ ສົງໄສອີກເຄິ່ງກ່ຽວກັບເຮົາ. ເຂົາບໍ່ຮູ້ຈັກວ່າເຮົາຢູ່ໃສ ຫຼື ໜ້າຂອງເຮົາໃຫຍ່ສໍ່າໃດ, ມັນກວ້າງສໍ່າກັບທະເລ ຫຼື ໄຮ້ພົມແດນຄືກັບທົ່ງຫຍ້າຂຽວບໍ? ບໍ່ມີໃຜຮູ້ຈັກສິ່ງເຫຼົ່ານີ້. ມີພຽງແຕ່ເມື່ອມະນຸດເຫັນໜ້າເຮົາໃນກ້ອນເມກໃນປັດຈຸບັນ ມະນຸດຈຶ່ງຮູ້ສຶກວ່າເຮົາທີ່ຢູ່ໃນຕຳນານແມ່ນຄວາມຈິງ ແລະ ສະນັ້ນ ເຂົາກໍນິຍົມຊົມຊອບເຮົາຫຼາຍຂຶ້ນ ແລະ ມັນເປັນຍ້ອນການກະທຳຂອງເຮົາເທົ່ານັ້ນ ການຍົກຍ້ອງຂອງເຂົາທີ່ມີສຳລັບເຮົາຈຶ່ງໃຫຍ່ຂຶ້ນໜ້ອຍໜຶ່ງ. ແຕ່ມະນຸດຍັງບໍ່ຮູ້ຈັກເຮົາ ແລະ ເຂົາພຽງແຕ່ເຫັນສ່ວນໜຶ່ງຂອງເຮົາໃນກ້ອນເມກ. ຫຼັງຈາກນັ້ນ ເຮົາກໍວາແຂນຂອງເຮົາອອກ ແລະ ສະແດງມັນໃຫ້ມະນຸດເຫັນ. ມະນຸດກໍຕື່ນຕົກໃຈ ແລະ ເອົາມືອັດປາກຂອງເຂົາ, ຢ້ານຢູ່ໃນສ່ວນເລິກວ່າຈະຖືກຕີໃຫ້ລົ້ມລົງດ້ວຍມືຂອງເຮົາ ແລະ ສະນັ້ນເຂົາຈຶ່ງເພີ່ມຄວາມເຄົາລົບນັບຖືໜ້ອຍໜຶ່ງໃນການຍົກຍ້ອງຂອງເຂົາ. ມະນຸດຈ້ອງຕາຂອງເຂົາເບິ່ງການເຄື່ອນໄຫວທຸກຢ່າງຂອງເຮົາ ໂດຍຢ້ານຢ່າງເລິກໆວ່າເຂົາຈະຖືກເຮົາຕີໃຫ້ລົ້ມລົງໃນເວລາທີ່ເຂົາບໍ່ສົນໃຈ, ແຕ່ເຮົາກໍບໍ່ໄດ້ຖືກຈຳກັດຍ້ອນການຖືກມະນຸດເຝົ້າເບິ່ງ ແລະ ເຮົາກໍສືບຕໍ່ປະຕິບັດພາລະກິດດ້ວຍມືຂອງເຮົາ. ມັນພຽງແຕ່ຍ້ອນການກະທຳທຸກຢ່າງທີ່ເຮົາເຮັດ ມະນຸດຈຶ່ງມີຄວາມນິຍົມຊົມຊອບບາງຢ່າງຕໍ່ເຮົາ ແລະ ສະນັ້ນຈຶ່ງມາຢູ່ຕໍ່ໜ້າເຮົາເທື່ອລະໜ້ອຍເພື່ອພົວພັນກັບເຮົາ. ເມື່ອທັງໝົດຂອງເຮົາຖືກເປີດເຜີຍຕໍ່ມະນຸດ, ມະນຸດກໍຈະເຫັນໜ້າຂອງເຮົາ ແລະ ຕັ້ງແຕ່ນັ້ນເປັນຕົ້ນໄປ ເຮົາກໍຈະບໍ່ລີ້ຊ້ອນ ຫຼື ປົກປິດຕົວເຮົາຈາກມະນຸດອີກຕໍ່ໄປ. ທົ່ວທັງຈັກກະວານ, ເຮົາຈະປາກົດຕົວຢ່າງເປີດເຜີຍຕໍ່ທຸກຄົນ ແລະ ທຸກຄົນທີ່ມາຈາກເນື້ອໜັງ ແລະ ເລືອດເນື້ອກໍຈະໄດ້ເຫັນເຖິງການກະທຳຂອງເຮົາທັງໝົດ. ທຸກສິ່ງທີ່ມາຈາກວິນຍານກໍຈະດຳລົງຢູ່ຢ່າງສັນຕິສຸກໃນຄົວເຮືອນຂອງເຮົາຢ່າງແນ່ນອນ ແລະ ຈະໄດ້ຊື່ນຊົມພອນອັນປະເສີດຮ່ວມກັນກັບເຮົາຢ່າງແນ່ນອນ. ທຸກຄົນທີ່ເຮົາເບິ່ງແຍງຈະຖືກຍົກເວັ້ນຈາກການຂ້ຽນຕີຢ່າງແນ່ນອນ ແລະ ຈະຫຼີກເວັ້ນຄວາມເຈັບປວດຂອງວິນຍານ ແລະ ຄວາມທໍລະມານຂອງເນື້ອໜັງຢ່າງແນ່ນອນ. ເຮົາຈະປາກົດຕົວຢ່າງເປີດເຜີຍຕໍ່ທຸກຄົນເພື່ອປົກຄອງ ແລະ ສະແດງອຳນາດ, ເພື່ອວ່າກິ່ນຊາກສົບຈະບໍ່ເໝັນໄປທົ່ວຈັກກະວານອີກຕໍ່ໄປ; ກົງກັນຂ້າມ ກິ່ນຫອມທີ່ສົດຊື່ນຂອງເຮົາຈະແຜ່ກະຈາຍໄປທົ່ວແຜ່ນດິນໂລກ, ເພາະມື້ຂອງເຮົາກຳລັງຫຍັບໃກ້ເຂົ້າມາແລ້ວ, ມະນຸດກຳລັງຕື່ນຂຶ້ນ, ທຸກສິ່ງເທິງແຜ່ນດິນໂລກແມ່ນຢູ່ໃນຄວາມເປັນລະບຽບ ແລະ ມື້ແຫ່ງການຢູ່ລອດຂອງແຜ່ນດິນໂລກແມ່ນບໍ່ມີອີກ, ຍ້ອນວ່າ ເຮົາໄດ້ກັບມາແລ້ວ!

ວັນທີ 6 ເມສາ 1992

# ບົດທີ 30

ຄັ້ງໜຶ່ງໃນທ່າມກາງມະນຸດ ເຮົາເຄີຍສະຫຼຸບໂດຍຫຍໍ້ເຖິງຄວາມບໍ່ເຊື່ອຟັງ ແລະ ຄວາມອ່ອນແອຂອງມະນຸດ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ເຂົ້າໃຈຄວາມອ່ອນແອຂອງມະນຸດ ແລະ ໄດ້ຮູ້ຈັກຄວາມບໍ່ເຊື່ອຟັງຂອງເຂົາ. ກ່ອນທີ່ຈະມາຢູ່ທ່າມກາງມະນຸດ, ເຮົາໄດ້ເຂົ້າໃຈຄວາມສຸກ ແລະ ຄວາມໂສກເສົ້າໃນມະນຸດມາດົນນານແລ້ວ ແລະ ຍ້ອນສິ່ງນີ້ ເຮົາຈຶ່ງສາມາດເຮັດສິ່ງທີ່ມະນຸດບໍ່ສາມາດເຮັດໄດ້ ແລະ ເວົ້າໃນສິ່ງທີ່ມະນຸດບໍ່ສາມາດເວົ້າໄດ້ ແລະ ເຮົາກໍເຮັດໄດ້ຢ່າງງ່າຍດາຍ. ນີ້ບໍ່ແມ່ນຄວາມແຕກຕ່າງລະຫວ່າງເຮົາ ແລະ ມະນຸດບໍ? ນີ້ບໍ່ແມ່ນຄວາມແຕກຕ່າງທີ່ຊັດເຈນບໍ? ເປັນໄປໄດ້ບໍວ່າ ພາລະກິດຂອງເຮົາແມ່ນສາມາດບັນລຸໄດ້ໃນຜູ້ຄົນທີ່ມີເນື້ອໜັງ ແລະ ເລືອດ? ເປັນໄປໄດ້ບໍ ທີ່ເຮົາຄືປະເພດດຽວກັບສິ່ງທີ່ຖືກສ້າງຂຶ້ນ? ຜູ້ຄົນໄດ້ຈັດລຳດັບໃຫ້ກັບເຮົາວ່າ "ເປັນຄືກັນ" ແລະ ນີ້ບໍ່ແມ່ນຍ້ອນວ່າພວກເຂົາບໍ່ຮູ້ຈັກເຮົາບໍ? ແທນທີ່ຈະເປັນຜູ້ສູງສົ່ງທ່າມກາງມະນຸດ ແລ້ວເປັນຫຍັງເຮົາຕ້ອງຖ່ອມຕົນເອງ? ເປັນຫຍັງມະນຸດຈຶ່ງປະຖິ້ມເຮົາ, ເປັນຫຍັງມະນຸດຈຶ່ງບໍ່ສາມາດປ່າວປະກາດນາມຂອງເຮົາ? ໃນໃຈຂອງເຮົາແມ່ນມີຄວາມໂສກເສົ້າຢ່າງມະຫາສານ ແຕ່ຜູ້ຄົນຈະສາມາດຮູ້ໄດ້ແນວໃດ? ພວກເຂົາຈະສາມາດເຫັນໄດ້ແນວໃດ? ການທີ່ບໍ່ເຄີຍປະຕິບັດກັບສິ່ງທີ່ກ່ຽວຂ້ອງກັບເຮົາໃຫ້ ເປັນສິ່ງທີ່ສຳຄັນທີ່ສຸດໃນຊີວິດຂອງພວກເຂົາ ໄດ້ເຮັດໃຫ້ຜູ້ຄົນມຶດມົວ ແລະ ສັບສົນ ຄືກັບວ່າ ພວກເຂົາຫາກໍກິນຢານອນຫຼັບ; ເມື່ອເຮົາເອີ້ນໃສ່ພວກເຂົາ, ພວກເຂົາພຽງແຕ່ສືບຕໍ່ຝັນ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ມີໃຜເຄີຍຮູ້ຈັກເຖິງການກະທຳຂອງເຮົາ. ໃນປັດຈຸບັນ, ຜູ້ຄົນສ່ວນໃຫຍ່ຍັງນອນຫຼັບສະນິດຢູ່. ເມື່ອມີສຽງເພງແຫ່ງອານາຈັກດັງຂຶ້ນເທົ່ານັ້ນ ພວກເຂົາຈຶ່ງຈະມືນຕາທີ່ຍັງເຫງົານອນຂອງເຂົາ ແລະ ຮູ້ສຶກໂສກເສົ້າເລັກນ້ອຍໃນໃຈຂອງພວກເຂົາ. ເມື່ອໄມ້ຄ້ອນເຫຼັກຂອງເຮົາຟາດລົງໃສ່ມະນຸດ, ພວກເຂົາຍັງໃຫ້ຄວາມສົນໃຈເລັກນ້ອຍ ຄືກັບວ່າ ຊາຕາກຳຂອງພວກເຂົາແມ່ນບໍ່ມີຄ່າຄືກັບເມັດຊາຍໃນທະເລ. ເຖິງແມ່ນວ່າ ພວກເຂົາສ່ວນໃຫຍ່ຈະມີຄວາມຮູ້ສຶກຕົວບາງຢ່າງ ແຕ່ພວກເຂົາຍັງບໍ່ຮູ້ຈັກວ່າ ຂັ້ນຕອນຕ່າງໆຂອງເຮົາແມ່ນໄປໄກສໍ່າໃດແລ້ວ ເນື່ອງຈາກວ່າ ຜູ້ຄົນບໍ່ພະຍາຍາມເຂົ້າໃຈເຮົາ ແລະ ດ້ວຍເຫດນັ້ນຈຶ່ງບໍ່ເຄີຍສາມາດປົດປ່ອຍຕົນເອງອອກຈາກການເປັນທາດຂອງຊາຕານໄດ້. ເຮົາເຄື່ອນໄຫວເໜືອທຸກສິ່ງ ແລະ ດຳລົງຢູ່ທ່າມກາງທຸກສິ່ງ ແລະ ໃນເວລາດຽວກັນ ເຮົາຈະເປັນຈຸດສູນກາງໃນຫົວໃຈຂອງທຸກຄົນ. ຍ້ອນເຫດຜົນນີ້ ຜູ້ຄົນຈຶ່ງເບິ່ງເຮົາຕ່າງອອກໄປ ໂດຍເຊື່ອວ່າ ເຮົາເໜືອທຳມະຊາດ ຫຼື ວ່າເຮົາບໍ່ສາມາດຢັ່ງເຖິງໄດ້ ແລະ ດ້ວຍເຫດນັ້ນ ຄວາມໄວ້ໃຈຂອງພວກເຂົາທີ່ມີຕໍ່ເຮົາຈຶ່ງໜັກແໜ້ນຂຶ້ນແຕ່ລະມື້. ຄັ້ງໜຶ່ງເຮົາເຄີຍນອນເທິງຢູ່ສະຫວັນຊັ້ນສາມ, ສັງເກດເບິ່ງທຸກຄົນ ແລະ ທຸກສິ່ງໃນຈັກກະວານ. ເມື່ອເຮົານອນ, ຜູ້ຄົນກໍງຽບລົງ, ມີຄວາມຢຳເກງຢ່າງໃຫຍ່ທີ່ຈະລົບກວນການພັກຜ່ອນຂອງເຮົາ. ເມື່ອເຮົາຕື່ນ, ພວກເຂົາກໍມີຊີວິດຊີວາທັນທີ ຄືກັບວ່າ ພວກເຂົາກຳລັງດຳເນີນການເອົາຄວາມສຸກມາໃຫ້ເຮົາຢ່າງຮີບດ່ວນ. ນີ້ບໍ່ແມ່ນທັດສະນະຄະຕິທີ່ມີຕໍ່ເຮົາຂອງຜູ້ຄົນເທິງແຜ່ນດິນໂລກບໍ? ແມ່ນໃຜທີ່ຢູ່ໃນທ່າມກາງຜູ້ຄົນໃນປັດຈຸບັນ ທີ່ເຫັນວ່າ ເຮົາທີ່ຢູ່ໃນສະຫວັນ ແລະ ເທິງແຜ່ນດິນໂລກແມ່ນຜູ້ດຽວກັນ

ແດ່? ແມ່ນໃຜແດ່ທີ່ບໍ່ເຄົາລົບເຮົາໃນສະຫວັນ? ແມ່ນໃຜແດ່ທີ່ບໍ່ດູຖູກເຮົາຢູ່ເທິງແຜ່ນດິນໂລກ? ເປັນຫຍັງມະນຸດຈຶ່ງຈີກເຮົາອອກເປັນທ່ອນໆຢູ່ຕະຫຼອດ? ເປັນຫຍັງມະນຸດຈຶ່ງມີສອງທັດສະນະຄະຕິກັບເຮົາ? ພຣະເຈົ້າທີ່ບັງເກີດເປັນມະນຸດຢູ່ເທິງແຜ່ນດິນໂລກບໍ່ແມ່ນພຣະເຈົ້າທີ່ບັນຊາທຸກສິ່ງຢູ່ໃນສະຫວັນບໍ? ເຮົາທີ່ຢູ່ສະຫວັນ ຕອນນີ້ບໍ່ໄດ້ຢູ່ເທິງແຜ່ນດິນໂລກບໍ? ເປັນຫຍັງຜູ້ຄົນຈຶ່ງເຫັນເຮົາ ແຕ່ບໍ່ຮູ້ຈັກເຮົາ? ເປັນຫຍັງສະຫວັນ ແລະ ແຜ່ນດິນໂລກຈຶ່ງຫ່າງໄກກັນຫຼາຍ? ສິ່ງເຫຼົ່ານີ້ບໍ່ຄູ່ຄວນທີ່ຈະໃຫ້ມະນຸດຄົ້ນຄວ້າຢ່າງເລິກເຊິ່ງຂຶ້ນບໍ?

ເມື່ອເຮົາເຮັດພາລະກິດ ແລະ ໃນຊ່ວງເວລາທີ່ເຮົາກ່າວພຣະຄຳຂອງເຮົາ, ຜູ້ຄົນແມ່ນປາດຖະໜາທີ່ຈະເພີ່ມ "ລົດຊາດ" ໃສ່ສິ່ງນີ້ຕະຫຼອດ ຄືກັບວ່າ ປະສາດສຳຜັດທາງກິ່ນຂອງພວກເຂົາແມ່ນໄວກວ່າເຮົາ, ຄືກັບວ່າ ພວກເຂົາເລືອກລົດຊາດເຜັດ ແລະ ຄືກັບວ່າ ເຮົາບໍ່ຮູ້ສິ່ງທີ່ມະນຸດຕ້ອງການ ແລະ ດ້ວຍເຫດນັ້ນ ຈຶ່ງຕ້ອງໄດ້ "ລົບກວນ" ມະນຸດເພື່ອ "ເສີມ" ພາລະກິດຂອງເຮົາ. ເຮົາບໍ່ໄດ້ຈົງໃຈຕ້ານຄວາມຄິດບວກຂອງມະນຸດ ແຕ່ຮຽກຮ້ອງໃຫ້ພວກເຂົາຊຳລະລ້າງຕົວເອງ ໂດຍອີງໃສ່ພື້ນຖານຂອງການຮູ້ຈັກເຮົາ. ຍ້ອນວ່າ ພວກເຂົາຂາດເຂີນຫຼາຍ ເຮົາຈຶ່ງແນະນຳໃຫ້ພວກເຂົາໃຊ້ຄວາມພະຍາຍາມຫຼາຍຂຶ້ນ ແລະ ຊົດເຊີຍຄວາມຂາດເຂີນຂອງພວກເຂົາ ເພື່ອເຮັດໃຫ້ເຮົາພໍໃຈ. ຄັ້ງໜຶ່ງຜູ້ຄົນເຄີຍຮູ້ຈັກເຮົາໃນແນວຄວາມຄິດຂອງພວກເຂົາ ແຕ່ພວກເຂົາບໍ່ຮູ້ສິ່ງນີ້, ດ້ວຍເຫດນັ້ນ ຄວາມຖະໜຸຖະໜອມຂອງພວກເຂົາຈຶ່ງຄືກັບການເຫັນເມັດຊາຍວ່າເປັນກ້ອນຄຳ. ເມື່ອເຮົາເຕືອນພວກເຂົາ, ພວກເຂົາກໍພຽງຖິ້ມບາງສ່ວນຂອງສິ່ງນີ້ເທົ່ານັ້ນ ແຕ່ແທນທີ່ຈະປ່ຽນເອົາສ່ວນທີ່ເປັນເງິນ ແລະ ຄຳ, ພວກເຂົາແມ່ນສືບຕໍ່ຮັບເອົາສ່ວນທີ່ຍັງເຫຼືອຢູ່ໃນມືຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຖ່ອມຕົວ ແລະ ອົດທົນຕະຫຼອດເວລາຢູ່ຕໍ່ໜ້າເຮົາ; ພວກເຂົາບໍ່ສາມາດເຂົ້າກັບເຮົາໄດ້ ຍ້ອນວ່າ ພວກເຂົາມີແນວຄວາມຄິດຫຼາຍ. ສະນັ້ນ, ເຮົາຈຶ່ງຕັດສິນໃຈທີ່ຈະຍຶດເອົາທຸກສິ່ງທີ່ມະນຸດມີ ແລະ ເປັນ ແລະ ໂຍນມັນໄປໄກໆເພື່ອວ່າ ທຸກຄົນຈະສາມາດອາໄສຢູ່ກັບເຮົາ ແລະ ບໍ່ແຍກຈາກເຮົາອີກຕໍ່ໄປ. ມັນເປັນຍ້ອນພາລະກິດຂອງເຮົາ ມະນຸດຈຶ່ງບໍ່ເຂົ້າໃຈຄວາມປະສົງຂອງເຮົາ. ບາງຄົນເຊື່ອວ່າ ເຮົາຈະສິ້ນສຸດພາລະກິດຂອງເຮົາເປັນຄັ້ງທີສອງ ແລະ ຖິ້ມພວກເຂົາລົງໃນນະຮົກ. ບາງຄົນເຊື່ອວ່າ ເຮົາຈະນຳໃຊ້ວິທີໃໝ່ໃນການເວົ້າ ແລະ ພວກເຂົາສ່ວນໃຫຍ່ແມ່ນສັ່ນດ້ວຍຄວາມຢ້ານກົວ: ພວກເຂົາມີຄວາມຢ້ານກົວຫຼາຍວ່າ ເຮົາຈະເຮັດພາລະກິດຂອງເຮົາໃຫ້ສຳເລັດ ແລະ ປະໃຫ້ພວກເຂົາບໍ່ມີບ່ອນໄປ ແລະ ກໍຢ້ານຫຼາຍວ່າ ເຮົາຈະປະຖິ້ມພວກເຂົາອີກຄັ້ງ. ຜູ້ຄົນໃຊ້ແນວຄວາມຄິດເກົ່າຕະຫຼອດເພື່ອປະເມີນພາລະກິດໃໝ່ຂອງເຮົາ. ເຮົາໄດ້ເວົ້າວ່າ ຜູ້ຄົນບໍ່ເຄີຍເຂົ້າໃຈວິທີການໃນການເຮັດພາລະກິດຂອງເຮົາ ແລ້ວໃນປັດຈຸບັນນີ້ພວກເຂົາສາມາດພິຈາລະນາຕົວເອງໃຫ້ດີໄດ້ບໍ? ແນວຄວາມຄິດເກົ່າຂອງຜູ້ຄົນບໍ່ແມ່ນອາວຸດທີ່ລົບກວນພາລະກິດຂອງເຮົາບໍ? ເວລາເຮົາເວົ້າກັບຄົນ, ພວກເຂົາຈະເວັ້ນການຈ້ອງເບິ່ງຂອງເຮົາຕະຫຼອດ ໂດຍມີຄວາມຢ້ານຫຼາຍວ່າ ສາຍຕາຂອງເຮົາໝາຍເອົາພວກເຂົາ. ສະນັ້ນ, ພວກເຂົາຈຶ່ງກົ້ມຫົວຂອງພວກເຂົາລົງຄືກັບວ່າ ໄດ້ຍອມຮັບການກວດກາຈາກເຮົາ ແລະ ນີ້ແມ່ນເກີດຈາກແນວຄວາມຄິດຂອງພວກເຂົາບໍ? ເປັນຫຍັງເຮົາຈຶ່ງຖ່ອມຕົວເຮົາເອງຈົນເຖິງປັດຈຸບັນ ແຕ່ກໍບໍ່ມີໃຜເຄີຍສັງເກດເຫັນເລີຍ? ເຮົາຕ້ອງ

ໄດ້ກົ້ມຂາບລົງໃຫ້ແກ່ມະນຸດບໍ? ເຮົາມາຈາກສະຫວັນສູ່ແຜ່ນດິນໂລກ, ເຮົາລົງມາຈາກບ່ອນສູງສູ່ສະຖານທີ່ລັບ ແລະ ມາຢູ່ທ່າມກາງມະນຸດ ແລະ ເປີດເຜີຍທຸກສິ່ງທີ່ເຮົາມີ ແລະ ສິ່ງທີ່ເຮົາເປັນຕໍ່ມະນຸດ. ພຣະທຳຂອງເຮົາແມ່ນຈິງໃຈ ແລະ ຈິງຈັງ, ອົດທົນ ແລະ ມີຄວາມເມດຕາ ແຕ່ມີໃຜເຄີຍເຫັນສິ່ງທີ່ເຮົາເປັນ ແລະ ມີບໍ່? ເຮົາຍັງລີ້ລັບຕໍ່ມະນຸດບໍ? ເປັນຫຍັງມັນຈຶ່ງຍາກສຳລັບເຮົາທີ່ຈະພົບປະກັບມະນຸດ? ມັນເປັນຍ້ອນວ່າ ຜູ້ຄົນຫຍຸ້ງກັບພາລະກິດຂອງພວກເຂົາບໍ? ມັນເປັນຍ້ອນວ່າ ເຮົາປະລະໜ້າທີ່ຂອງເຮົາ ແລະ ທຸກຄົນແມ່ນມີເຈດຕະນາທີ່ຈະສະແຫວງຫາຄວາມສຳເລັດບໍ?

ໃນຄວາມຄິດຂອງຜູ້ຄົນ, ພຣະເຈົ້າແມ່ນພຣະເຈົ້າ ແລະ ມັນກໍບໍ່ງ່າຍທີ່ຈະພົວພັນນຳ ໃນຂະນະທີ່ມະນຸດແມ່ນມະນຸດ ແລະ ບໍ່ຄວນກາຍເປັນຄົນໄຮ້ສິນທຳ ແຕ່ເຖິງຢ່າງນັ້ນ ກໍຍັງບໍ່ສາມາດນຳເອົາການກະທຳຂອງຜູ້ຄົນມາຢູ່ຕໍ່ໜ້າເຮົາໄດ້. ເປັນໄປໄດ້ບໍ່ທີ່ຄວາມຕ້ອງການຂອງເຮົາສູງເກີນໄປ? ເປັນໄປໄດ້ບໍ່ທີ່ມະນຸດອ່ອນແອເກີນໄປ? ເປັນຫຍັງຜູ້ຄົນຈຶ່ງເບິ່ງມາດຕະຖານທີ່ເຮົາຕ້ອງການຈາກທາງໄກຕະຫຼອດ? ມະນຸດບໍ່ສາມາດບັນລຸສິ່ງເຫຼົ່ານັ້ນໄດ້ແທ້ບໍ? ຄວາມຕ້ອງການຂອງເຮົາແມ່ນຖືກຄຳນວນໂດຍອີງຕາມ "ກົດບັນຍັດ" ຂອງຜູ້ຄົນ ແລະ ດ້ວຍເຫດນັ້ນ ມັນຈຶ່ງບໍ່ເຄີຍນອກເໜືອໄປກວ່າວຸດທິພາວະຂອງມະນຸດ ແຕ່ເຖິງຢ່າງນັ້ນ ຜູ້ຄົນຍັງບໍ່ສາມາດບັນລຸມາດຕະຖານທີ່ເຮົາຕ້ອງການ. ເຮົາຖືກມະນຸດປະຖິ້ມຫຼາຍຄັ້ງຈົນນັບບໍ່ຖ້ວນ, ຜູ້ຄົນເບິ່ງເຮົາດ້ວຍສາຍຕາທີ່ເຍາະເຍີ້ຍຫຼາຍຄັ້ງຈົນນັບບໍ່ຖ້ວນ ຄືກັບວ່າ ຮ່າງກາຍຂອງເຮົາແມ່ນຖືກປົກຫຸ້ມດ້ວຍໜາມ ແລະ ເປັນສິ່ງທີ່ພວກເຂົາກຽດຊັງ ແລະ ດ້ວຍເຫດນັ້ນ ຈຶ່ງກຽດຊັງເຮົາ ແລະ ເຊື່ອວ່າ ເຮົາບໍ່ມີຄ່າ. ດ້ວຍວິທີນີ້ ເຮົາຈຶ່ງຖືກຊຸກໄປໆມາໆໂດຍມະນຸດ. ຜູ້ຄົນໄດ້ເອົາເຮືອນໃນລາຄາທີ່ຕໍ່າມາໃຫ້ເຮົາຫຼາຍຄັ້ງຈົນນັບບໍ່ຖ້ວນ ແລະ ພວກເຂົາໄດ້ຂາຍໃຫ້ເຮົາ ຫຼາຍຄັ້ງຈົນນັບບໍ່ຖ້ວນໃນລາຄາທີ່ສູງ ແລະ ຍ້ອນສິ່ງນີ້ ເຮົາຈຶ່ງພົບເຫັນຕົວເອງຢູ່ໃນສະພາບປັດຈຸບັນຂອງເຮົາ. ມັນເປັນຄືວ່າ ຜູ້ຄົນຍັງກຳລັງວາງແຜນສຳລັບເຮົາ; ພວກເຂົາສ່ວນໃຫຍ່ຕ້ອງການທີ່ຈະຂາຍໃຫ້ເຮົາເພື່ອຜົນກຳໄລຫຼາຍຮ້ອຍລ້ານໂດລາ ເນື່ອງຈາກວ່າ ມະນຸດບໍ່ເຄີຍຖະໜອມເຮົາ. ມັນເປັນຄືວ່າ ເຮົາໄດ້ກາຍເປັນຄົນກາງລະຫວ່າງຜູ້ຄົນ ຫຼື ເປັນອາວຸດປະລະມະນູ ທີ່ພວກເຂົາໃຊ້ຕໍ່ສູ້ກັນເອງ ຫຼື ເປັນສັນຍາທີ່ເຊັນລະຫວ່າງພວກເຂົາ ແລະ ດ້ວຍເຫດນັ້ນ ຈຶ່ງສະຫຼຸບໄດ້ວ່າ ເຮົາບໍ່ມີຄຸນຄ່າໃນຫົວໃຈຂອງມະນຸດເລີຍ ແລະ ເຮົາເປັນພຽງເຄື່ອງເຮືອນທີ່ບໍ່ຈຳເປັນ. ແຕ່ເຮົາບໍ່ໄດ້ປະນາມມະນຸດຍ້ອນສິ່ງນີ້; ເຮົາບໍ່ໄດ້ເຮັດຫຍັງ ນອກຈາກຊ່ວຍມະນຸດໃຫ້ລອດພົ້ນ ແລະ ເຫັນອົກເຫັນໃຈມະນຸດຢູ່ສະເໝີ.

ຜູ້ຄົນເຊື່ອວ່າ ເຮົາຈະຮູ້ສຶກສະບາຍໃຈ ເມື່ອເຮົາຖິ້ມຜູ້ຄົນລົງໄປນະຮົກ ຄືກັບວ່າ ເຮົາກຳລັງເຮັດການຄ້າພິເສດກັບນະຮົກ ແລະ ຄືກັບວ່າ ເຮົາເປັນພະແນກປະເພດນັ້ນທີ່ຊ່ຽວຊານທາງດ້ານການຂາຍຜູ້ຄົນ, ຄືກັບວ່າ ເຮົາແມ່ນຊ່ຽວຊານໃນການຫຼອກລວງຜູ້ຄົນ ແລະ ຈະຂາຍພວກເຂົາໃນລາຄາທີ່ສູງ ເມື່ອເຮົາມີພວກເຂົາໃນມືຂອງເຮົາ. ເຖິງປາກຂອງຜູ້ຄົນຈະບໍ່ເວົ້າແນວນັ້ນ ແຕ່ໃນໃຈຂອງພວກເຂົານີ້ຄືສິ່ງທີ່ພວກເຂົາເຊື່ອ. ເຖິງແມ່ນວ່າ ພວກເຂົາທຸກຄົນຮັກເຮົາ ແຕ່ພວກເຂົາກໍເຮັດແບບນັ້ນຢ່າງລັບໆ. ເຮົາບໍ່ໄດ້ຈ່າຍຄ່າດັ່ງກ່າວໃນລາຄາແພງ ແລະ ໃຊ້ຈ່າຍຢ່າງຫຼວງຫຼາຍ ເພື່ອແລກກັບຄວາມຮັກເລັກນ້ອຍນີ້ຈາກພວກເຂົາບໍ? ຜູ້ຄົນແມ່ນຄົນຫຼອກລວງ ແລະ ເຮົາແມ່ນຫຼິ້ນບົດບາດເປັນຜູ້ທີ່ຖືກຫຼອກລວງ

ຕະຫຼອດ. ມັນເປັນຄືກັບວ່າ ເຮົາຊື່ຫຼາຍເກີນໄປ: ເມື່ອພວກເຂົາໄດ້ເຫັນຈຸດອ່ອນນີ້ ພວກເຂົາກໍຈະສືບຕໍ່ຫຼອກລວງເຮົາ. ພຣະທຳຈາກປາກຂອງເຮົາບໍ່ໄດ້ໝາຍຄວາມວ່າ ຈະເຮັດໃຫ້ຜູ້ຄົນຕາຍ ຫຼື ເພື່ອຕິດສະຫຼາກໃສ່ພວກເຂົາແບບສຸ່ມເຮັດ, ພວກມັນແມ່ນຄວາມເປັນຈິງຂອງມະນຸດ. ບາງເທື່ອ ພຣະທຳບາງຂໍ້ຂອງເຮົາອາດ “ຮ້າຍແຮງເກີນໄປ” ເຊິ່ງໃນກໍລະນີດັ່ງກ່າວ ເຮົາກໍໄດ້ແຕ່ “ຂໍ” ອະໄພຈາກຜູ້ຄົນເທົ່ານັ້ນ; ຍ້ອນເຮົາບໍ່ມີ “ທັກສະ” ໃນພາສາຂອງມະນຸດ ສິ່ງທີ່ເຮົາເວົ້າຈຶ່ງບໍ່ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ຄົນໄດ້. ບາງເທື່ອ ພຣະທຳບາງຂໍ້ຂອງເຮົາແທງເຂົ້າຫົວໃຈຂອງມະນຸດ ສະນັ້ນ ເຮົາຈຶ່ງໄດ້ແຕ່ “ຂໍ” ໃຫ້ພວກເຂົາອົດທົນເທົ່ານັ້ນ; ຍ້ອນເຮົາບໍ່ຊໍານານໃນປັດຊະຍາຊີວິດຂອງມະນຸດ ແລະ ບໍ່ເກັ່ງໃນການເວົ້າ, ພຣະທຳຂອງເຮົາຫຼາຍຂໍ້ຈຶ່ງອາດສ້າງຄວາມອັບອາຍໃນຜູ້ຄົນ. ບາງເທື່ອ ພຣະທຳບາງຂໍ້ຂອງເຮົາກ່າວເຖິງຮາກເຫງົ້າຂອງຄວາມເຈັບເປັນຂອງຜູ້ຄົນ ແລະ ເປີດເຜີຍຄວາມເຈັບໄຂ້ຂອງພວກເຂົາ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງແນະນໍາໃຫ້ກິນຢາທີ່ເຮົາໄດ້ກະກຽມໄວ້ໃຫ້ພວກເຈົ້າ ເນື່ອງຈາກເຮົາບໍ່ມີເຈດຕະນາທີ່ຈະເຮັດໃຫ້ເຈົ້າເຈັບ ແລະ ຢານີ້ກໍບໍ່ມີຜົນຂ້າງຄຽງ. ບາງເທື່ອ ພຣະທຳບາງຂໍ້ຂອງເຮົາແມ່ນຟັງເບິ່ງແລ້ວຄືບໍ່ “ສົມຈິງ” ແຕ່ເຮົາ “ຂໍຮ້ອງ” ຜູ້ຄົນບໍ່ໃຫ້ຕື່ນຕົກໃຈ. ເຮົາບໍ່ “ວ່ອງໄວ” ທັງມື ແລະ ຕີນ, ສະນັ້ນ ພຣະທຳຂອງເຮົາຈຶ່ງຍັງບໍ່ໄດ້ຖືກປະຕິບັດເທື່ອ. ເຮົາຂໍໃຫ້ຜູ້ຄົນ “ອົດທົນ” ຕໍ່ເຮົາ. ພຣະທຳເຫຼົ່ານີ້ແມ່ນມີປະໂຫຍດແກ່ມະນຸດບໍ? ເຮົາຫວັງວ່າ ຜູ້ຄົນຈະສາມາດໄດ້ຮັບບາງຢ່າງຈາກພຣະທຳເຫຼົ່ານີ້ ເພື່ອວ່າ ພຣະທຳຂອງເຮົາຈະບໍ່ໄຮ້ຄວາມໝາຍຕະຫຼອດ!

ວັນທີ 9 ເມສາ 1992

# ບົດທີ 31

ເຮົາບໍ່ເຄີຍມີບ່ອນຢູ່ໃນຫົວໃຈຂອງຜູ້ຄົນ. ເມື່ອເຮົາຊອກຫາຜູ້ຄົນຢ່າງແທ້ຈິງ ພວກເຂົາກໍປິດຕາຂອງພວກເຂົາ ແລ້ວເມີນເສີຍຕໍ່ການກະທຳຂອງເຮົາ ຄືກັບວ່າ ທຸກສິ່ງທີ່ເຮົາເຮັດແມ່ນການພະຍາຍາມເຮັດໃຫ້ພວກເຂົາພໍໃຈ ເຊິ່ງດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ພວກເຂົາລັງກຽດການກະທຳຂອງເຮົາສະເໝີ. ມັນຄືກັບວ່າ ເຮົາຂາດການຮັບຮູ້ໃດໜຶ່ງ, ຄືກັບວ່າ ເຮົາສະແດງຕົວເຮົາເອງຕໍ່ໜ້າມະນຸດສະເໝີ ເຊິ່ງເຮັດໃຫ້ເຂົາໂກດຮ້າຍ ນັ້ນກໍຄືຜູ້ທີ່ "ຊື່ສັດ ແລະ ຊອບທຳ". ແຕ່ເຮົາໄດ້ອົດທົນພາຍໃຕ້ສະພາບການທີ່ບໍ່ດີດັ່ງກ່າວ ແລະ ເຮົາສືບຕໍ່ເຮັດພາລະກິດຂອງເຮົາ. ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ເຮົາໄດ້ຊີມລົດຊາດທີ່ຫວານ, ສົ້ມ, ຂົມ ແລະ ຈັດຈາກປະສົບການຂອງມະນຸດ ແລະ ເຮົາໄດ້ມາໃນສາຍລົມ ແລະ ໄປກັບຝົນ; ເຮົາເວົ້າວ່າ ເຮົາໄດ້ປະສົບກັບການຂົ່ມເຫັງຂອງຄອບຄົວ, ປະສົບກັບການຂຶ້ນ ແລະ ລົງຂອງຊີວິດ ແລະ ປະສົບກັບຄວາມເຈັບປວດກັບການຈາກໄປຈາກຮ່າງກາຍ. ຢ່າງໃດກໍຕາມ, ໃນເວລາທີ່ເຮົາສະເດັດມາເທິງແຜ່ນດິນໂລກ ຜູ້ຄົນກໍໄດ້ປະຕິເສດເຈດຕະນາທີ່ດີຂອງເຮົາ "ຢ່າງສຸພາບ" ແທນທີ່ຈະຍິນດີຕ້ອນຮັບເຮົາ ຍ້ອນຄວາມລຳບາກທີ່ເຮົາໄດ້ທົນທຸກເພື່ອພວກເຂົາ. ເຮົາຈະບໍ່ເຈັບປວດດ້ວຍສິ່ງນີ້ໄດ້ແນວໃດ? ເຮົາຈະບໍ່ເສົ້າເສຍໃຈໄດ້ແນວໃດ? ເປັນໄປໄດ້ບໍ ທີ່ເຮົາໄດ້ກາຍເປັນເນື້ອໜັງເພື່ອໃຫ້ທຸກສິ່ງຈົບລົງແບບນີ້ເທົ່ານັ້ນ? ເປັນຫຍັງມະນຸດຈຶ່ງບໍ່ຮັກເຮົາ? ເປັນຫຍັງຄວາມຮັກຂອງເຮົາຈຶ່ງຖືກຕອບແທນດ້ວຍຄວາມກຽດຊັງຂອງມະນຸດ? ເປັນໄປໄດ້ບໍວ່າ ເຮົາຕ້ອງທົນທຸກແບບນີ້? ຜູ້ຄົນໄດ້ເສຍນ້ຳຕາແຫ່ງຄວາມເຫັນອົກເຫັນໃຈ ຍ້ອນຄວາມລຳບາກຂອງເຮົາຢູ່ເທິງແຜ່ນດິນໂລກ ແລະ ຜູ້ຄົນໄດ້ຕໍ່ວ່າຄວາມບໍ່ຍຸຕິທຳຂອງຄວາມໂຊກຮ້າຍຂອງເຮົາ. ແຕ່ໃຜເຄີຍຮູ້ຈັກໃຈຂອງເຮົາຢ່າງແທ້ຈິງແດ່? ໃຜສາມາດເບິ່ງເຫັນຄວາມຮູ້ສຶກຂອງເຮົາແດ່? ມະນຸດເຄີຍມີຄວາມຮັກທີ່ເລິກເຊິ່ງໃຫ້ກັບເຮົາ ແລະ ເຂົາເຄີຍປາດຖະໜາເຖິງເຮົາໃນຄວາມຝັນຂອງເຂົາເລື້ອຍໆ ແຕ່ຜູ້ຄົນເທິງແຜ່ນດິນໂລກຈະສາມາດເຂົ້າໃຈຄວາມປະສົງຂອງເຮົາໃນສະຫວັນໄດ້ແນວໃດ? ເຖິງວ່າ ຜູ້ຄົນຈະເຄີຍເບິ່ງເຫັນຄວາມຮູ້ສຶກທີ່ໂສກເສົ້າຂອງເຮົາ ແຕ່ມີໃຜທີ່ເຄີຍເຫັນອົກເຫັນໃຈຄວາມທຸກທໍລະມານຂອງເຮົາແດ່ ໃນຖານະເປັນຜູ້ທີ່ທົນທຸກຮ່ວມກັນ? ເປັນໄປໄດ້ບໍ ທີ່ສາມັນສຳນຶກຂອງຜູ້ຄົນເທິງແຜ່ນດິນໂລກສາມາດດົນບັນດານ ແລະ ປ່ຽນແປງຈິດໃຈທີ່ໂສກເສົ້າຂອງເຮົາ? ຜູ້ຄົນເທິງແຜ່ນດິນໂລກບໍ່ສາມາດບອກເຮົາໄດ້ແທ້ບໍ ກ່ຽວກັບຄວາມລຳບາກທີ່ບໍ່ສາມາດເວົ້າເຖິງພາຍໃນໃຈຂອງພວກເຂົາ? ຈິດໃຈ ແລະ ວິນຍານເຄີຍອາໄສເຊິ່ງກັນແລະກັນ ແຕ່ຍ້ອນອຸປະສັກຂອງເນື້ອໜັງ ສະໝອງຂອງຜູ້ຄົນຈຶ່ງໄດ້ "ສູນເສຍການຄວບຄຸມ". ເຮົາເຄີຍເຕືອນຜູ້ຄົນໃຫ້ມາຢູ່ຕໍ່ໜ້າເຮົາ ແຕ່ການຮຽກຮ້ອງຂອງເຮົາບໍ່ໄດ້ເຮັດໃຫ້ຜູ້ຄົນເຮັດໃນສິ່ງທີ່ເຮົາຂໍ; ພວກເຂົາພຽງແຕ່ເບິ່ງຂຶ້ນໄປເທິງຟ້າ, ຕາເຕັມໄປດ້ວຍນ້ຳຕາ ຄືກັບວ່າ ພວກເຂົາແບກຮັບຄວາມລຳບາກທີ່ບໍ່ສາມາດບັນຍາຍໄດ້ ແລະ ຄືກັບວ່າ ມີບາງສິ່ງໄດ້ຂວາງທາງພວກເຂົາຢູ່. ດ້ວຍເຫດນັ້ນ, ພວກເຂົາຈຶ່ງໄດ້ພະນົມມືຂອງພວກເຂົາ ແລ້ວກົ້ມລົງຢູ່ກ້ອງສະຫວັນເພື່ອອ້ອນວອນຕໍ່ເຮົາ. ຍ້ອນວ່າ ເຮົາມີຄວາມເມດຕາ ເຮົາຈຶ່ງປະທານພອນຂອງເຮົາໃຫ້ແກ່ມະນຸດ ແລະ ພຽງໃນກະພິບຕາ,

ພໍແຕ່ການສະເດັດມາຂອງເຮົາມາເຖິງທ່າມກາງມະນຸດ, ມະນຸດກໍໄດ້ລືມຄຳສາບານຂອງເຂົາທີ່ມີຕໍ່ສະຫວັນໄປດົນນານແລ້ວ. ນີ້ບໍ່ແມ່ນຄວາມບໍ່ເຊື່ອຟັງຂອງມະນຸດແທ້ບໍ? ເປັນຫຍັງມະນຸດຈຶ່ງຕ້ອງທົນທຸກກັບ "ໂລກຄວາມຈຳເຊື່ອມ" ຕະຫຼອດເວລາ? ເຮົາໄດ້ແທງເຂົາບໍ? ເຮົາໄດ້ຕີຮ່າງກາຍຂອງເຂົາບໍ? ເຮົາບອກມະນຸດ ກ່ຽວກັບຄວາມຮູ້ສຶກທີ່ຢູ່ພາຍໃນໃຈຂອງເຮົາ; ເປັນຫຍັງເຂົາຈຶ່ງຫຼີກເວັ້ນເຮົາຕະຫຼອດ? ໃນຄວາມຊົງຈຳຂອງມະນຸດ ມັນຄືກັບວ່າ ພວກເຂົາໄດ້ສູນເສຍບາງຢ່າງ ແລະ ກໍຫາສິ່ງນັ້ນບໍ່ເຫັນ ພ້ອມນັ້ນມັນຍັງຄືກັບວ່າ ຄວາມຊົງຈຳຂອງພວກເຂົາແມ່ນບໍ່ຖືກຕ້ອງເລີຍ. ດ້ວຍເຫດນັ້ນ ຜູ້ຄົນຈຶ່ງທົນທຸກກັບຄວາມຫຼົງລືມໃນຊີວິດຂອງພວກເຂົາຕະຫຼອດ ແລະ ມື້ຕ່າງໆໃນຊີວິດຂອງມະນຸດທຸກຄົນກໍຢູ່ໃນຄວາມສັບສົນ. ແຕ່ກໍບໍ່ມີໃຜເຮັດຫຍັງເພື່ອຈັດການກັບສິ່ງນີ້; ຜູ້ຄົນບໍ່ເຮັດຫຍັງ ມີແຕ່ຢຽບຢໍ່າ ແລະ ຂ້າກັນເອງ ເຊິ່ງໄດ້ນຳພາໄປສູ່ສະພາບແຫ່ງຄວາມສູນເສຍທີ່ເສຍຫາຍຢ່າງໃຫຍ່ໃນປັດຈຸບັນ ແລະ ເຮັດໃຫ້ທຸກສິ່ງໃນຈັກກະວານຕ້ອງພັງລົງມາສູ່ສາຍນໍ້າ ແລະ ບຶງທີ່ສົກກະປົກ ໂດຍທີ່ບໍ່ມີໂອກາດໄດ້ຮັບຄວາມລອດພົ້ນເລີຍ.

ເວລາທີ່ເຮົາມາຢູ່ທ່າມກາງຜູ້ຄົນທັງໝົດ ແມ່ນເປັນຊ່ວງເວລາທີ່ຜູ້ຄົນໄດ້ຈິງຮັກພັກດີຕໍ່ເຮົາ. ໃນເວລານີ້ ມັງກອນແດງທີ່ຍິ່ງໃຫຍ່ໄດ້ເລີ່ມເອົາມືທີ່ໂຫດຮ້າຍຂອງມັນໄປໃສ່ຜູ້ຄົນ. ເຮົາຍອມຮັບ "ຄຳເຊີນ" ແລະ ແລະ ເຮົາສະເດັດມາ "ນັ່ງໃນໂຕະອາຫານລ້ຽງ" ໃນທ່າມກາງມະນຸດ ໂດຍທີ່ຖື "ໜັງສືເຊີນ" ທີ່ມະນຸດຊາດໄດ້ມອບໃຫ້ເຮົາ. ໃນເວລາທີ່ພວກເຂົາເຫັນເຮົາ ຜູ້ຄົນກໍບໍ່ໄດ້ສົນໃຈເຮົາ ເນື່ອງຈາກວ່າ ເຮົາບໍ່ໄດ້ແຕ່ງກາຍໃຫ້ກັບຕົວເອງດ້ວຍເຄື່ອງນຸ່ງແບບຄົນຮັ່ງມີ ແລະ ໄດ້ຖືເອົາແຕ່ "ບັດປະຈຳຕົວ" ຂອງເຮົາ ເພື່ອນັ່ງຢູ່ໂຕະກັບມະນຸດ. ບໍ່ໄດ້ມີເຄື່ອງແຕ່ງໜ້າທີ່ແພງຢູ່ໃບໜ້າຂອງເຮົາ, ບໍ່ມີມຸງກຸດຢູ່ຫົວຂອງເຮົາ ແລະ ເຮົາໃສ່ເກີບທຳມະດາທີ່ເຮັດຢູ່ເຮືອນຄູ່ໜຶ່ງ. ສິ່ງທີ່ເຮັດໃຫ້ຜູ້ຄົນຜິດຫວັງຫຼາຍທີ່ສຸດ ແມ່ນການບໍ່ມີລິບສະຕິກຢູ່ປາກຂອງເຮົາ. ນອກຈາກນັ້ນ, ເຮົາບໍ່ໄດ້ເວົ້າແບບສຸະພາບ ແລະ ລີ້ນຂອງເຮົາກໍບໍ່ແມ່ນປາກຂອງນັກຂຽນທີ່ມີຄວາມພ້ອມ ແຕ່ກົງກັນຂ້າມ ພຣະທຳຂອງເຮົາແຕ່ລະຂໍ້ແມ່ນແທງເຂົ້າໄປໃນສ່ວນເລິກສຸດຂອງຫົວໃຈມະນຸດ ເຊິ່ງເພີ່ມຄວາມນຶກຄິດ "ທີ່ດີ" ໜ້ອຍໜຶ່ງ ກ່ຽວກັບປາກຂອງເຮົາໃຫ້ແກ່ຜູ້ຄົນ. ການປາກົດຕົວທີ່ກ່າວມານັ້ນ ແມ່ນພຽງພໍທີ່ຈະເຮັດໃຫ້ຜູ້ຄົນມອບ "ການປະຕິບັດທີ່ດີ" ໃຫ້ແກ່ເຮົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງປະຕິບັດກັບເຮົາທີ່ເປັນຄົນບ້ານນອກທຳມະດາຄືກັນ ທີ່ມາຈາກຊົນນະບົດ ທີ່ບໍ່ມີຄວາມຮູ້ກ່ຽວກັບໂລກ ແລະ ບໍ່ມີສະຕິປັນຍາ. ແຕ່ໃນເວລາທີ່ທຸກຄົນຍື່ນ "ຂອງຂວັນທີ່ເປັນເງິນ", ຜູ້ຄົນກໍຍັງບໍ່ຖືວ່າເຮົາເປັນຜູ້ທີ່ເປັນຕາເຄົາລົບນັບຖື, ພວກເຂົາພຽງມາຢູ່ຕໍ່ໜ້າເຮົາ ໂດຍບໍ່ມີຄວາມເຄົາລົບໃດໆ, ມາແບບຊ້າໆ ແລະ ແບບບໍ່ພໍໃຈ. ໃນເວລາທີ່ມືຂອງເຮົາຍື່ນອອກໄປ ພວກເຂົາກໍຕົກຕະລຶງທັນທີ ແລະ ພວກເຂົາຄຸເຂົ່າລົງ ແລະ ກໍພາກັນຮ້ອງເປັນສຽງດັງຢ່າງພໍໃຈ. ພວກເຂົາເກັບກຳເອົາ "ຂອງຂວັນທີ່ເປັນເງິນ" ທັງໝົດຂອງເຮົາ. ຍ້ອນວ່າ ເປັນຈຳນວນທີ່ຫຼວງຫຼາຍ ພວກເຂົາເລີຍຄິດທັນທີວ່າ ເຮົາເປັນເສດຖີເງິນລ້ານ ແລະ ໄດ້ຈີກເສື້ອຜ້າທີ່ຂາດອອກຈາກຕົນໂຕຂອງເຮົາໂດຍທີ່ເຮົາບໍ່ໄດ້ຍິນຍອມ ແລ້ວເອົາເຄື່ອງນຸ່ງໃໝ່ມາປ່ຽນແທນ ແຕ່ສິ່ງນີ້ກໍບໍ່ໄດ້ເຮັດໃຫ້ເຮົາດີໃຈ. ຍ້ອນວ່າ ເຮົາບໍ່ລື້ງເຄີຍກັບຊີວິດທີ່ສຸກສະບາຍແບບນັ້ນ ແລະ

ບໍ່ມັກການປະຕິບັດແບບ "ຊັ້ນສູງ", ຍ້ອນວ່າ ເຮົາເກີດຈາກເຮືອນບໍລິສຸດ ແລະ ສາມາດເວົ້າໄດ້ວ່າ ຍ້ອນເຮົາເກີດໃນ "ຄວາມທຸກຍາກ" ເຮົາຈຶ່ງບໍ່ລຶ້ງກັບຊີວິດທີ່ຫຼູຫຼາ ໂດຍທີ່ມີຄົນຮັບໃຊ້ເຮົາທັງມື ແລະ ຕີນ. ເຮົາປາດຖະໜາວ່າ ຜູ້ຄົນອາດຈະສາມາດເຂົ້າໃຈຄວາມຮູ້ສຶກໃນໃຈຂອງເຮົາເທົ່ານັ້ນ ແລະ ປາດຖະໜາວ່າ ພວກເຂົາອາດຈະສາມາດທົນທຸກກັບຄວາມລຳບາກໜ້ອຍໜຶ່ງ ເພື່ອຍອມຮັບເອົາຄວາມຈິງຈາກປາກຂອງເຮົາທີ່ເຮັດໃຫ້ເຂົາບໍ່ສະບາຍໃຈ. ຍ້ອນວ່າ ເຮົາບໍ່ເຄີຍສາມາດເວົ້າກ່ຽວກັບທິດສະດີ ຫຼື ບໍ່ສາມາດໃຊ້ວິທີລັບໆຂອງຜູ້ຄົນໃນການປະຕິບັດຕົນໃນສັງຄົມ ເພື່ອພົວພັນກັບຜູ້ຄົນ ແລະ ຍ້ອນວ່າ ເຮົາບໍ່ສາມາດສ້າງພຣະທຳຂອງເຮົາ ຕາມການເຫັນດີ ຫຼື ຕາມຈິດຕະວິທະຍາຂອງພວກເຂົາ ຜູ້ຄົນຈຶ່ງກຽດຊັງເຮົາຕະຫຼອດ, ເຊື່ອວ່າ ເຮົາບໍ່ສົມຄວນທີ່ຈະຕ້ອງພົວພັນນຳ ແລະ ໄດ້ເວົ້າວ່າ ເຮົາມີລີ້ນທີ່ແຫຼມຄົມ ແລະ ເຮັດໃຫ້ຜູ້ຄົນເຈັບປວດຕະຫຼອດ. ແຕ່ເຮົາບໍ່ມີທາງເລືອກ: ເຮົາເຄີຍ "ສຶກສາ" ຈິດຕະວິທະຍາຂອງມະນຸດ, ເຄີຍ "ຮຽນແບບ" ປັດຊະຍາຂອງມະນຸດສຳລັບການດຳລົງຊີວິດ ແລະ ເຄີຍໄປເຂົ້າ "ວິທະຍາໄລພາສາ" ເພື່ອຮຽນພາສາຂອງມະນຸດ ເພື່ອວ່າ ເຮົາອາດຊຳນານວິທີການເວົ້າຂອງມະນຸດ ແລະ ເວົ້າໃຫ້ເໝາະສົມກັບຄວາມເຫັນດີຂອງພວກເຂົາ ແຕ່ເຖິງວ່າ ເຮົາຈະໄດ້ໃຊ້ຄວາມພະຍາຍາມຫຼາຍພຽງໃດ ແລະ ໄດ້ຢ້ຽມຢາມ "ຜູ້ຊ່ຽວຊານ" ຫຼາຍຄົນ ແຕ່ທຸກສິ່ງກໍບໍ່ມີປະໂຫຍດຫຍັງ. ບໍ່ເຄີຍມີຈັກຄັ້ງທີ່ຈະມີຄວາມເປັນມະນຸດໃນຕົວເຮົາ. ໃນເວລາຫຼາຍປີຜ່ານມານີ້ ຄວາມພະຍາຍາມຂອງເຮົາບໍ່ເຄີຍໄດ້ຮັບຜົນແມ່ນແຕ່ໜ້ອຍດຽວ ແລະ ເຮົາບໍ່ເຄີຍມີຄວາມສາມາດແມ່ນແຕ່ໜ້ອຍດຽວໃນດ້ານພາສາຂອງມະນຸດ. ສະນັ້ນ ຄຳເວົ້າຂອງມະນຸດທີ່ວ່າ "ຄວາມດຸໝັ່ນເຮັດໃຫ້ປະສົບຜົນສຳເລັດ" ແມ່ນຖືກ "ສະທ້ອນ" ອອກຈາກຕົວເຮົາ ແລະ ດ້ວຍເຫດນັ້ນ ຄຳເວົ້າເຫຼົ່ານີ້ຈະສິ້ນສຸດລົງເທິງແຜ່ນດິນໂລກ. ຜູ້ຄົນແມ່ນບໍ່ຮູ້ເລີຍວ່າ ສຸພາສິດສັ້ນໆນີ້ແມ່ນບໍ່ໄດ້ຮັບການອະນຸມັດຈາກພຣະເຈົ້າຢູ່ສະຫວັນ ເຊິ່ງໄດ້ມີການຢືນຢັນຢ່າງພຽງພໍວ່າ ຄຳເວົ້າດັ່ງກ່າວບໍ່ເໝາະສົມ. ດ້ວຍເຫດນັ້ນ ເຮົາຈຶ່ງຂໍອະໄພມາຍັງມະນຸດ ແຕ່ມັນກໍເຮັດຫຍັງບໍ່ໄດ້, ນັ້ນຄືສິ່ງທີ່ເຮົາໄດ້ຮັບຈາກການເປັນ "ຄົນໂງ່" ຫຼາຍ. ເຮົາບໍ່ສາມາດຮຽນຮູ້ພາສາຂອງມະນຸດ, ມີຄວາມຊຳນານໃນປັດຊະຍາສຳລັບການດຳລົງຊີວິດ ແລະ ໃນການເຂົ້າສັງຄົມກັບມະນຸດ. ເຮົາມີແຕ່ແນະນຳໃຫ້ຜູ້ຄົນອົດທົນ, ອົດກັ້ນຄວາມໃຈຮ້າຍພາຍໃນໃຈຂອງພວກເຂົາ ແລະ ໃຫ້ພວກເຂົາບໍ່ຕ້ອງເຈັບເພື່ອເຮົາເທົ່ານັ້ນ. ແມ່ນໃຜເຮັດໃຫ້ພວກເຮົາພົວພັນກັນ? ແມ່ນໃຜເຮັດໃຫ້ພວກເຮົາມາພົບກັນໃນຊ່ວງເວລານີ້? ແມ່ນໃຜເຮັດໃຫ້ພວກເຮົາມາແລກປ່ຽນອຸດົມຄະຕິດຽວກັນ?

ອຸປະນິໄສຂອງເຮົາແມ່ນຢູ່ໃນພຣະທຳທຸກຂໍ້ຂອງເຮົາ ແຕ່ຜູ້ຄົນກໍບໍ່ສາມາດເຂົ້າໃຈໃນພຣະທຳຂອງເຮົາ. ພວກເຂົາມັກແບ່ງແຍກຄວາມແຕກຕ່າງໃນສິ່ງທີ່ເຮົາກ່າວ ເຊິ່ງມັນມີປະໂຫຍດຫຍັງ? ແນວຄິດຂອງພວກເຂົາກ່ຽວກັບເຮົາຈະສາມາດເຮັດໃຫ້ພວກເຂົາສົມບູນໄດ້ບໍ? ສິ່ງຕ່າງໆຢູ່ເທິງແຜ່ນດິນໂລກຈະສາມາດເຮັດໃຫ້ຄວາມປະສົງຂອງເຮົາສຳເລັດໄດ້ບໍ? ເຮົາພະຍາຍາມທີ່ຈະສອນຜູ້ຄົນກ່ຽວກັບວິທີເວົ້າພຣະທຳຂອງເຮົາ ແຕ່ມັນຄືກັບວ່າ ລີ້ນຂອງມະນຸດພັນກັນ ແລະ ເຂົາບໍ່ເຄີຍສາມາດຮຽນຮູ້ວິທີເວົ້າພຣະທຳຂອງເຮົາດັ່ງທີ່ເຮົາປາດຖະໜາເລີຍ. ເຮົາສອນເຂົາຜ່ານປາກຕໍ່ປາກ ແຕ່ເຂົາບໍ່

ເຄີຍສາມາດຮຽນຮູ້ໄດ້. ມີແຕ່ຫຼັງຈາກສິ່ງນີ້ເທົ່ານັ້ນ ເຮົາຈຶ່ງໄດ້ຄົ້ນພົບສິ່ງໃໝ່: ຜູ້ຄົນເທິງແຜ່ນດິນໂລກຈະສາມາດເວົ້າພຣະທຳແຫ່ງສະຫວັນໄດ້ແນວໃດ? ສິ່ງນີ້ບໍ່ເປັນການລະເມີດຕໍ່ກົດເກນແຫ່ງທຳມະຊາດບໍ? ແຕ່ຍ້ອນຄວາມກະຕືລືລົ້ນ ແລະ ຄວາມຢາກຮູ້ຢາກເຫັນຂອງມະນຸດທີ່ມີຕໍ່ເຮົາ, ເຮົາຈຶ່ງເລີ່ມດຳປະຕິບັດພາລະກິດບາງສ່ວນຕໍ່ມະນຸດອີກ. ເຮົາບໍ່ເຄີຍເຮັດໃຫ້ມະນຸດອັບອາຍຍ້ອນຄວາມບໍ່ພຽງພໍຂອງເຂົາ ແຕ່ກົງກັນຂ້າມ ແມ່ນໄດ້ສະໜອງໃຫ້ແກ່ມະນຸດ ຕາມສິ່ງທີ່ເຂົາຂາດເຂີນ. ມັນເປັນຍ້ອນສິ່ງນີ້ເທົ່ານັ້ນ ຜູ້ຄົນຈຶ່ງມີຄວາມນຶກຄິດທີ່ດີເລັກນ້ອຍກ່ຽວກັບເຮົາ ແລະ ເຮົາໄດ້ໃຊ້ໂອກາດນີ້ ເພື່ອເຕົ້າໂຮມຜູ້ຄົນມາຮ່ວມກັນອີກຄັ້ງ ແລະ ເພື່ອວ່າ ພວກເຂົາອາດຊື່ນຊົມກັບຄວາມອຸດົມສົມບູນຂອງເຮົາອີກຄັ້ງ. ໃນເວລານີ້ ຜູ້ຄົນແມ່ນໝົກມຸ້ນຢູ່ໃນຄວາມສຸກອີກຄັ້ງ, ສຽງເຊຍ ແລະ ສຽງຫົວແມ່ນລອຍໄປທົ່ວເມກຫຼາຍສີໃນທ້ອງຟ້າ. ເຮົາເປີດໃຈຂອງມະນຸດ ແລະ ມະນຸດກໍມີພະລັງທັນທີ ແລະ ເຂົາກໍບໍ່ເຕັມໃຈທີ່ຈະລີ້ຈາກເຮົາອີກຕໍ່ໄປ ເນື່ອງຈາກວ່າ ເຂົາໄດ້ຊີມລົດຊາດຫວານຂອງນໍ້າເຜິ້ງ ແລະ ດ້ວຍເຫດນັ້ນ ເຂົາກໍໄດ້ເອົາເຄື່ອງທີ່ບໍ່ໃຊ້ແລ້ວຂອງເຂົາອອກມາເພື່ອແລກປ່ຽນ ຄືກັບວ່າ ເຮົາໄດ້ກາຍເປັນບ່ອນເກັບຂີ້ເຫຍື້ອຫຼື ສະຖານີບຳບັດເຄື່ອງເສດເຫຼືອ. ສະນັ້ນ, ພາຍຫຼັງທີ່ໄດ້ເຫັນ “ໂຄສະນາ” ທີ່ຖືກຕິດຂຶ້ນ ຜູ້ຄົນກໍມາຢູ່ຕໍ່ໜ້າເຮົາ ແລະ ມີສ່ວນຮ່ວມດ້ວຍຄວາມກະຕືລືລົ້ນ ເນື່ອງຈາກເບິ່ງຄືວ່າ ພວກເຂົາຄິດວ່າ ພວກເຂົາສາມາດໄດ້ຮັບສິ່ງ “ທີ່ລະນຶກ” ດັ່ງນັ້ນ ພວກເຂົາທຸກຄົນກໍໄດ້ສົ່ງ “ຈົດໝາຍ” ເຖິງເຮົາ ເພື່ອວ່າພວກເຂົາຈະສາມາດເຂົ້າຮ່ວມໃນງານທີ່ເຮົາໄດ້ຈັດ. ໃນຊ່ວງເວລານີ້ ພວກເຂົາບໍ່ຢ້ານການສູນເສຍເພາະວ່າ “ຕົ້ນທຶນ” ທີ່ກ່ຽວຂ້ອງກັບກິດຈະກຳເຫຼົ່ານີ້ແມ່ນບໍ່ຫຼາຍ ແລະ ດ້ວຍເຫດນັ້ນ ພວກເຂົາກໍເລີຍກ້າທີ່ຈະສ່ຽງເຂົ້າຮ່ວມ. ຖ້າບໍ່ມີເຄື່ອງທີ່ລະນຶກທີ່ໄດ້ມາຈາກການເຂົ້າຮ່ວມ ຜູ້ຄົນກໍຈະອອກຈາກສະໜາມ ແລະ ຂໍເງິນຂອງພວກເຂົາຄືນ ແລະ ພວກເຂົາຍັງຈະຄິດໄລ່ “ດອກເບ້ຍ” ທີ່ເຮົາຕິດຄ້າງພວກເຂົາອີກ. ມັນເປັນເພາະວ່າ ມາດຕະຖານການດຳລົງຊີວິດໃນປັດຈຸບັນໄດ້ເພີ່ມຂຶ້ນ, ການໄປເຖິງ “ລະດັບຄວາມຮັ່ງມີປານກາງ” ແລະ ການບັນລຸ “ຄວາມທັນສະໄໝ”, “ການໄປເຂດຊົນນະບົດ” ພ້ອມກັບ “ເຈົ້າໜ້າທີ່ອາວຸໂສ” ເພື່ອຈັດກຽມພາລະກິດ, ຄວາມເຊື່ອຂອງຜູ້ຄົນຈຶ່ງທະວີຄູນຂຶ້ນທັນທີເປັນຫຼາຍເທົ່າ ແລະ ເປັນເພາະວ່າ “ການຈັດຕັ້ງ” ຂອງພວກເຂົາແມ່ນດີຂຶ້ນເລື້ອຍໆ ພວກເຂົາກໍເລີຍເບິ່ງເຮົາດ້ວຍຄວາມເຫຼື້ອມໃສ ແລະ ເຕັມໃຈທີ່ຈະຜົວພັນກັບເຮົາ ເພື່ອຫວັງໄດ້ຮັບການເຊື່ອໃຈຈາກເຮົາ.

ວັນທີ 11 ເມສາ 1992

# ບົດທີ 32

ເມື່ອຜູ້ຄົນເຕົ້າໂຮມກັນກັບເຮົາ, ຫົວໃຈຂອງເຮົາກໍເຕັມໄປດ້ວຍຄວາມປິຕິຍິນດີ. ທັນໃດນັ້ນ, ເຮົາກໍປະທານພອນທີ່ຢູ່ໃນມືຂອງເຮົາທ່າມກາງມະນຸດ ເພື່ອຜູ້ຄົນອາດຈະຊຸມນຸມກັນກັບເຮົາ ແລະ ບໍ່ເປັນສັດຕູທີ່ບໍ່ເຊື່ອຟັງເຮົາ ແຕ່ເປັນເພື່ອນທີ່ສາມາດເຂົ້າກັນກັບເຮົາໄດ້. ສະນັ້ນ ເຮົາຍັງປະຕິບັດກັບມະນຸດດ້ວຍຄວາມຈິງໃຈ. ໃນພາລະກິດຂອງເຮົາ, ມະນຸດແມ່ນເບິ່ງຄືກັບເປັນສະມາຊິກຂອງອົງກອນລະດັບສູງ, ສະນັ້ນ ເຮົາຈຶ່ງສົນໃຈເຂົາຫຼາຍຂຶ້ນ, ຍ້ອນເຂົາເປັນເປົ້າໝາຍຂອງພາລະກິດຂອງເຮົາສະເໝີ. ເຮົາໄດ້ສ້າງພື້ນທີ່ຂອງເຮົາໃນຫົວໃຈຂອງຜູ້ຄົນ ເພື່ອວ່າຫົວໃຈຂອງພວກເຂົາອາດຫຼຽວມາທາງເຮົາ, ແຕ່ພວກເຂົາກໍຍັງຂາດຄວາມຮູ້ຢ່າງສິ້ນເຊີງວ່າເປັນຫຍັງເຮົາຈຶ່ງເຮັດສິ່ງນີ້ ແລະ ພວກເຂົາບໍ່ເຮັດຫຍັງເລີຍນອກຈາກລໍຖ້າ. ເຖິງແມ່ນມີຫ້ອງທີ່ເຮົາໄດ້ສ້າງຂຶ້ນໃນຫົວໃຈຂອງຜູ້ຄົນ, ພວກເຂົາກໍບໍ່ຕ້ອງການໃຫ້ເຮົາອາໄສຢູ່ໃນນັ້ນ. ກົງກັນຂ້າມ, ພວກເຂົາລໍຖ້າ "ຜູ້ສັກສິດ" ໃນຫົວໃຈຂອງພວກເຂົາໃຫ້ມາເຖິງໃນໄວໆ. ຍ້ອນຕົວຕົນຂອງເຮົາ "ຕໍ່າຕ້ອຍ" ເກີນໄປ, ເຮົາຈຶ່ງບໍ່ເໝາະສົມກັບຄວາມຮຽກຮ້ອງຂອງຜູ້ຄົນ ແລະ ສະນັ້ນຈຶ່ງຖືກພວກເຂົາປະຖິ້ມ. ສິ່ງທີ່ພວກເຂົາຕ້ອງການກໍຄືຕົວ "ເຮົາ" ທີ່ສູງສົ່ງ ແລະ ຍິ່ງໃຫຍ່, ແຕ່ເມື່ອເວລາເຮົາມາ, ເຮົາບໍ່ໄດ້ປາກົດໃນລັກສະນະແບບນັ້ນໃຫ້ມະນຸດເຫັນ, ສະນັ້ນພວກເຂົາຈຶ່ງສືບຕໍ່ຫຼຽວເບິ່ງໄປໄກໆ, ລໍຖ້າຜູ້ຄົນທີ່ຢູ່ໃນຫົວໃຈຂອງພວກເຂົາ. ເມື່ອເຮົາມາຢູ່ທ່າມກາງຜູ້ຄົນ, ພວກເຂົາປະຕິເສດເຮົາຢູ່ຕໍ່ໜ້າປວງຊົນ. ເຮົາພຽງແຕ່ສາມາດຢືນຢູ່ຂ້າງດຽວ, ລໍຖ້າໃຫ້ມະນຸດ "ຈັດການ", ໄດ້ແຕ່ຫຼຽວເບິ່ງວ່າ ໃນທີ່ສຸດແລ້ວ ຜູ້ຄົນຈະເຮັດກັບເຮົາແນວໃດ, ນີ້ຄື "ຜະລິດຕະພັນ" ທີ່ຂາດເຂີນ. ເຮົາບໍ່ຫຼຽວເບິ່ງຮອຍແປ້ວຂອງຜູ້ຄົນ, ແຕ່ຫຼຽວເບິ່ງສ່ວນໃດໃນພວກເຂົາທີ່ບໍ່ມີຮອຍແປ້ວ ແລະ ຈາກສິ່ງນີ້ ເຮົາກໍພໍໃຈແລ້ວ. ໃນສາຍຕາຂອງຜູ້ຄົນ, ເຮົາເປັນພຽງ "ດາວດວງນ້ອຍ" ທີ່ໄດ້ລົງມາຈາກທ້ອງຟ້າ, ເຮົາເປັນພຽງບຸກຄົນທີ່ຕໍ່າຕ້ອຍທີ່ສຸດໃນສະຫວັນ ແລະ ການທີ່ເຮົາມາເຖິງແຜ່ນດິນໂລກໃນມື້ນີ້ກໍຍ້ອນໄດ້ຖືກມອບໝາຍໜ້າທີ່ໂດຍພຣະເຈົ້າ. ຜົນຕາມມາກໍຄື ຜູ້ຄົນພາກັນຕີຄວາມໝາຍອອກໄປຕ່າງໆນາໆກ່ຽວກັບຄໍາວ່າ "ເຮົາ" ແລະ "ພຣະເຈົ້າ" ໂດຍຢ້ານຢູ່ເລິກໆວ່າຈະພິຈາລະນາວ່າພຣະເຈົ້າ ແລະ ເຮົາຈະແມ່ນສິ່ງດຽວກັນ. ຍ້ອນພາບລັກສະນະຂອງເຮົາບໍ່ມີຫຍັງກ່ຽວຂ້ອງກັບລັກສະນະຂອງພຣະເຈົ້າ, ທຸກຄົນຈຶ່ງເຊື່ອວ່າ ເຮົາເປັນຜູ້ຮັບໃຊ້ທີ່ບໍ່ໄດ້ຢູ່ໃນຄອບຄົວຂອງພຣະເຈົ້າ ແລະ ພວກເຂົາເວົ້າວ່າສິ່ງນີ້ບໍ່ແມ່ນພາບລັກສະນະຂອງພຣະເຈົ້າ. ບາງເທື່ອກໍມີຄົນທີ່ໄດ້ເຫັນພຣະເຈົ້າ, ແຕ່ຍ້ອນການທີ່ເຮົາຂາດຄວາມເຂົ້າໃຈເທິງແຜ່ນດິນໂລກ, ພຣະເຈົ້າຈຶ່ງບໍ່ເຄີຍ "ປາກົດຕົວ" ຕໍ່ເຮົາຈັກເທື່ອ. ບາງເທື່ອເຮົາມີ "ຄວາມເຊື່ອ" ໜ້ອຍເກີນໄປ ແລະ ສະນັ້ນ ຜູ້ຄົນຈຶ່ງເບິ່ງເຮົາຕໍ່າຕ້ອຍ. ຜູ້ຄົນຈິນຕະນາການວ່າຖ້າບາງຄົນເປັນພຣະເຈົ້າແທ້ໆ ແລ້ວເຂົາກໍຈະຊ່ຽວຊານໃນພາສາມະນຸດຢ່າງແນ່ນອນ ເພາະວ່າພຣະເຈົ້າຄືພຣະຜູ້ສ້າງ. ແຕ່ແທ້ຈິງແລ້ວ ຄວາມຈິງແມ່ນກົງກັນຂ້າມ: ບໍ່ແມ່ນພຽງແຕ່ເຮົາບໍ່ແມ່ນຜູ້ຊ່ຽວຊານດ້ານພາສາມະນຸດ, ແຕ່ມີຫຼາຍຄັ້ງທີ່ເຮົາບໍ່ສາມາດແມ່ນແຕ່ "ສະໜອງ" ໃຫ້ກັບ "ຄວາມຂາດເຂີນ" ຂອງມະນຸດ. ຜົນຕາມມາກໍຄື ເຮົາຮູ້ສຶກ "ຜິດ" ເລັກນ້ອຍ ຍ້ອນວ່າ ເຮົາບໍ່ໄດ້ກະທໍາຕາມທີ່ຜູ້ຄົນ

"ຮຽກຮ້ອງ", ພຽງແຕ່ຈັດກຽມເຄື່ອງມື ແລະ ປະຕິບັດຕາມສິ່ງທີ່ພວກເຂົາ "ຂາດ". ຄວາມຕ້ອງການທີ່ເຮົາຮຽກຮ້ອງຈາກມະນຸດແມ່ນບໍ່ຫຼາຍ, ແຕ່ຜູ້ຄົນກໍເຊື່ອອີກແບບໜຶ່ງ. ສະນັ້ນ "ຄວາມຖ່ອມຕົນ" ຂອງພວກເຂົາຈຶ່ງຖືກເປີດເຜີຍຢູ່ໃນການເຄື່ອນໄຫວທຸກຢ່າງຂອງພວກເຂົາ. ພວກເຂົາມັກຮັບຜິດຊອບຍ່າງໄປກ່ອນເຮົາເພື່ອນຳທາງເຮົາຢູ່ສະເໝີ ໂດຍຢ້ານຢູ່ເລິກໆວ່າເຮົາຈະຫຼົງທາງ, ຢ້ານວ່າເຮົາຈະຍ່າງຫຼົງໄປໃນປ່າເກົ່າແກ່ທີ່ຢູ່ເລິກໃນພູເຂົາ. ຜົນຕາມມາກໍຄື ຜູ້ຄົນນຳທາງເຮົາໄປຂ້າງໜ້າຢູ່ຕະຫຼອດເວລາ ໂດຍຢ້ານຢ່າງເລິກໆວ່າເຮົາຈະຍ່າງເຂົ້າສູ່ຄຸກມືດໃຕ້ດິນ. ເຮົາຂ້ອນຂ້າງຮູ້ສຶກ "ປະທັບໃຈຢ່າງຫຼາຍ" ກ່ຽວກັບຄວາມເຊື່ອຂອງຜູ້ຄົນ, ຍ້ອນພວກເຂົາໄດ້ "ເຮັດວຽກໜັກ" ເພື່ອເຮົາ ໂດຍບໍ່ໄດ້ຄິດເຖິງອາຫານ ຫຼື ການຫຼັບນອນ, ຈົນເຖິງກັບວ່າ ການເຮັດວຽກໜັກເພື່ອເຮົາໄດ້ເຮັດໃຫ້ພວກເຂົາບໍ່ໄດ້ຫຼັບນອນໝົດມື້ໝົດຄືນ ແລະ ເຖິງກັບຜົມຫງອກ ເຊິ່ງນີ້ແມ່ນພຽງພໍທີ່ຈະສະແດງໃຫ້ເຫັນວ່າ ຄວາມເຊື່ອຂອງພວກເຂົາ "ຢູ່ເໜືອ" ຈັກກະວານ ແລະ "ເກີນກວ່າ" ອັກຄະສາວົກ ແລະ ຜູ້ປະກາດພຣະທຳຕະຫຼອດຍຸກຕ່າງໆ.

ເຮົາບໍ່ຕົບມືດ້ວຍຄວາມຍິນດີ ຍ້ອນທັກສະຍິ່ງໃຫຍ່ຂອງຜູ້ຄົນ ແລະ ເຮົາບໍ່ຫຼຽວເບິ່ງພວກເຂົາຢ່າງເຢັນຊາ ຍ້ອນຂໍ້ບົກຜ່ອງຂອງພວກເຂົາ. ເຮົາພຽງແຕ່ເຮັດໃນສິ່ງທີ່ຢູ່ພາຍໃນມືຂອງເຮົາ, ເຮົາບໍ່ປະຕິບັດຕໍ່ຄົນໃດໜຶ່ງຢ່າງພິເສດ, ພຽງແຕ່ປະຕິບັດພາລະກິດຕາມແຜນການຂອງເຮົາເທົ່ານັ້ນ. ແຕ່ຜູ້ຄົນບໍ່ຮູ້ຈັກຄວາມປະສົງຂອງເຮົາ ແລະ ສືບຕໍ່ອະທິຖານສຳລັບສິ່ງຕ່າງໆຈາກເຮົາ, ຄືກັບວ່າຄວາມມັ່ງຄັ່ງທີ່ເຮົາໄດ້ປະທານໃຫ້ກັບພວກເຂົານັ້ນບໍ່ສາມາດສະໜອງຕາມເງື່ອນໄຂຂອງພວກເຂົາໄດ້, ຄືກັບວ່າອຸປະສົງມີຫຼາຍກວ່າອຸປະທານ. ແຕ່ໃນຍຸກປັດຈຸບັນ, ທຸກຄົນຮູ້ສຶກວ່າ "ເງິນເຟີ້" ເຊິ່ງຜົນຕາມມາກໍຄືມືຂອງພວກເຂົາແມ່ນເຕັມໄປດ້ວຍສິ່ງທີ່ເຮົາໄດ້ມອບໃຫ້ພວກເຂົາເພື່ອຄວາມສຸກ. ມັນເປັນຍ້ອນສິ່ງນີ້ພວກເຂົາຈຶ່ງເລີ່ມເບື່ອໜ່າຍເຮົາ ແລະ ແລ້ວຊີວິດຂອງພວກເຂົາຈຶ່ງເຕັມໄປດ້ວຍຄວາມສັບສົນ ແລະ ພວກເຂົາຂາດຄວາມຮູ້ໃນສິ່ງທີ່ພວກເຂົາຄວນ ແລະ ບໍ່ຄວນກິນ. ບາງຄົນເຖິງກັບເກາະແໜ້ນໃນສິ່ງຕ່າງໆທີ່ເຮົາໄດ້ມອບໃຫ້ກັບພວກເຂົາເພື່ອຄວາມສຸກ, ຈ້ອງເບິ່ງສິ່ງເຫຼົ່ານັ້ນຢ່າງໃກ້ຊິດ. ເພາະຜູ້ຄົນເຄີຍທົນທຸກກັບຄວາມອຶດຢາກ ແລະ ມັນບໍ່ແມ່ນເລື່ອງງ່າຍສຳລັບພວກເຂົາທີ່ຈະໄດ້ຮັບຄວາມສຸກໃນປັດຈຸບັນ, ພວກເຂົາລ້ວນແລ້ວແຕ່ "ສຳນຶກໃນບຸນຄຸນຢ່າງບໍ່ສິ້ນສຸດ" ແລະ ມີການປ່ຽນແປງບາງຢ່າງໃນທ່າທີຂອງພວກເຂົາທີ່ມີຕໍ່ເຮົາ. ພວກເຂົາສືບຕໍ່ຮ້ອງໄຫ້ຕໍ່ໜ້າເຮົາ; ເຮົາໄດ້ມອບຫຼາຍຢ່າງໃຫ້ກັບພວກເຂົາ, ຕໍ່ໜ້າເຮົາ ພວກເຂົາສືບຕໍ່ຈັບມືຂອງເຮົາ ແລະ ເຮັດ "ສຽງແຫ່ງຄວາມກະຕັນຍູ". ເຮົາເຄື່ອນໄຫວຢູ່ເໜືອຈັກກະວານ ແລະ ໃນຂະນະທີ່ເຮົາຍ່າງ ເຮົາກໍສັງເກດເບິ່ງຜູ້ຄົນຂອງຈັກກະວານທັງປວງ. ທ່າມກາງຝູງຊົນເທິງແຜ່ນດິນໂລກ, ບໍ່ເຄີຍມີຜູ້ໃດທີ່ເໝາະສົມສຳລັບພາລະກິດຂອງເຮົາ ຫຼື ຄົນທີ່ຮັກເຮົາຢ່າງແທ້ຈິງ. ສະນັ້ນ, ໃນຊ່ວງເວລານີ້ ເຮົາຈຶ່ງຫາຍໃຈໃຫຍ່ດ້ວຍຄວາມຜິດຫວັງ ແລະ ຜູ້ຄົນກໍພາກັນແຕກກະຈາຍໄປທົ່ວດ້ວຍທັນທີທັນໃດ, ບໍ່ຊຸມນຸມກັນອີກຕໍ່ໄປ ໂດຍຢ້ານຢູ່ເລິກໆວ່າເຮົາຈະ "ຈັບພວກເຂົາທັງໝົດດ້ວຍແຫອັນດຽວ". ເຮົາໃຊ້ໂອກາດນີ້ເພື່ອມາຢູ່ທ່າມກາງມະນຸດ, ເພື່ອປະຕິບັດພາລະກິດຂອງເຮົາ ເຊິ່ງເປັນພາລະກິດທີ່ເໝາະສົມ ທ່າມກາງຜູ້ຄົນທີ່ແຕກກະຈາຍເຫຼົ່ານີ້,

ເລືອກເອົາຄົນທີ່ເໝາະສົມສຳລັບເຮົາເພື່ອປະຕິບັດພາລະກິດພານໃນພວກເຂົາ. ເຮົາບໍ່ປາຖະໜາທີ່ຈະ "ກັກຂັງ" ຜູ້ຄົນທ່າມກາງການຂ້ຽນຕີຂອງເຮົາ ເພື່ອທີ່ພວກເຂົາຈະບໍ່ມີວັນສາມາດຫຼົບໜີໄດ້. ເຮົາພຽງແຕ່ປະຕິບັດພາລະກິດທີ່ເຮົາຕ້ອງການປະຕິບັດ. ເຮົາໄດ້ມາເພື່ອຂໍ "ຄວາມຊ່ວຍເຫຼືອ" ຈາກມະນຸດ; ຍ້ອນການຄຸ້ມຄອງຂອງເຮົາຂາດການກະທຳຂອງມະນຸດ, ມັນຈຶ່ງເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພາລະກິດຂອງເຮົາປະສົບຜົນສຳເລັດ ແລະ ມັນເຮັດໃຫ້ພາລະກິດຂອງເຮົາດຳເນີນໄປແບບບໍ່ມີປະສິດຕິພາບ. ເຮົາຫວັງພຽງແຕ່ວ່າໃຫ້ຜູ້ຄົນມີຄວາມຕັ້ງໃຈທີ່ຈະຮ່ວມມືກັບເຮົາ. ເຮົາບໍ່ໄດ້ຮຽກຮ້ອງໃຫ້ພວກເຂົາຄົວອາຫານດີໆໃຫ້ກັບເຮົາກິນ ຫຼື ໃຫ້ພວກເຂົາຈັດກຽມບ່ອນນອນທີ່ເໝາະສົມໃຫ້ເຮົາໄດ້ວາງຫົວນອນ ຫຼື ໃຫ້ພວກເຂົາເຮັດເສື້ອຜ້າທີ່ສວຍງາມໃຫ້ເຮົາໜຸ່ງ, ເຮົາບໍ່ໄດ້ຄຳນຶງເຖິງສິ່ງເຫຼົ່ານີ້ແມ່ນແຕ່ໜ້ອຍດຽວ. ເມື່ອຜູ້ຄົນສາມາດເຂົ້າໃຈຄວາມປະສົງຂອງເຮົາ ແລະ ກ້າວໄປກັບເຮົາຂ້າງໆກັນ, ເຮົາກໍຈະພໍໃຈ.

ຜູ້ໃດຢູ່ເທິງແຜ່ນດິນໂລກທີ່ເຄີຍຮັບເອົາເຮົາດ້ວຍຫົວໃຈຂອງພວກເຂົາ? ຜູ້ໃດເຄີຍຮັກເຮົາດ້ວຍຫົວໃຈຂອງພວກເຂົາ? ຄວາມຮັກຂອງຜູ້ຄົນເຈືອປົນຢູ່ສະເໝີ; ແມ່ນແຕ່ເຮົາກໍ "ບໍ່ຮູ້ຈັກ" ວ່າເປັນຫຍັງຄວາມຮັກຂອງພວກເຂົາຈຶ່ງບໍ່ສາມາດເຫືອດແຫ້ງ ແລະ ບໍລິສຸດໄດ້. ສະນັ້ນຈຶ່ງມີ "ຄວາມເລິກລັບ" ຫຼາຍຢ່າງທີ່ປະກອບຢູ່ພາຍໃນມະນຸດ. ທ່າມກາງສິ່ງຖືກສ້າງ, ມະນຸດແມ່ນເບິ່ງຄືວ່າເປັນຄົນທີ່ "ອັດສະຈັນ" ແລະ "ບໍ່ສາມາດຢັ່ງເຖິງໄດ້" ແລະ ສະນັ້ນ ເຂົາຈຶ່ງມີ "ຄຸນນະສົມບັດ" ຕໍ່ໜ້າເຮົາ, ຄືກັບວ່າເຂົາມີສະຖານະເທົ່າທຽມກັບເຮົາ, ແຕ່ເຂົາບໍ່ເຫັນຄວາມແປກປະຫຼາດກ່ຽວກັບ "ສະຖານະ" ນີ້ຂອງເຂົາ. ໃນສິ່ງນີ້, ມັນບໍ່ແມ່ນວ່າເຮົາບໍ່ຍອມໃຫ້ຜູ້ຄົນຢືນຢູ່ໃນຕຳແໜ່ງນີ້ ແລະ ມີຄວາມສຸກກັບສິ່ງດັ່ງກ່າວ, ແຕ່ເຮົາປາຖະໜາທີ່ຈະໃຫ້ພວກເຂົາມີຄວາມຮູ້ສຶກຢ່າງຖືກຕ້ອງ, ໃຫ້ພວກເຂົາບໍ່ຄິດຢ່າງສູງສົ່ງກ່ຽວກັບພວກເຂົາເອງ, ມັນມີຄວາມຫ່າງໄກລະຫວ່າງສະຫວັນ ແລະ ແຜ່ນດິນໂລກ, ສຳລັບລະຫວ່າງພຣະເຈົ້າ ແລະ ມະນຸດ ແມ່ນບໍ່ຕ້ອງເວົ້າເຖິງ. ແລ້ວໄລຍະທາງລະຫວ່າງພຣະເຈົ້າ ແລະ ມະນຸດແຮງບໍ່ໄກຫຼາຍບໍ? ເທິງແຜ່ນດິນໂລກ, ມະນຸດ ແລະ ເຮົາ "ຢູ່ໃນເຮືອລຳດຽວກັນ" ແລະ ພວກເຮົາ "ຜ່ານຜ່າວິກິດຮ່ວມກັນ". ຕົວຕົນຂອງເຮົາບໍ່ໄດ້ຍົກເວັ້ນເຮົາຈາກການປະສົບກັບຄວາມລຳບາກຂອງໂລກມະນຸດ ແລະ ມັນເປັນຍ້ອນສິ່ງນີ້ ເຮົາຈຶ່ງຕົກຢູ່ໃນສະຖານະການແບບນີ້ໃນປັດຈຸບັນ. ເຮົາບໍ່ເຄີຍມີທີ່ພັກເທິງແຜ່ນດິນໂລກໃຫ້ອາໄສຢ່າງສະຫງົບສຸກ, ຍ້ອນສາເຫດນີ້ ຜູ້ຄົນຈຶ່ງເວົ້າວ່າ "ບຸດມະນຸດບໍ່ເຄີຍມີບ່ອນໃຫ້ວາງຫົວຂອງພຣະອົງນອນຈັກເທື່ອ". ຜົນຕາມມາກໍຄື ຜູ້ຄົນຍັງຮ້ອງໄຫ້ເສຍນໍ້າຕາດ້ວຍຄວາມເຫັນໃຈເຮົາ ແລະ ຮວບໂຮມເງິນຫຼາຍສິບຢວນເພື່ອເປັນ "ເງິນທຶນຊ່ວຍເຫຼືອ" ສຳລັບເຮົາ. ຍ້ອນສິ່ງນີ້ ເຮົາຈຶ່ງມີບ່ອນໃຫ້ພັກເຊົາ; ຖ້າບໍ່ແມ່ນຍ້ອນ "ຄວາມຊ່ວຍເຫຼືອ" ຂອງຜູ້ຄົນ, ຜູ້ໃດຈະຮູ້ໄດ້ວ່າເຮົາຈະເປັນແນວໃດ!

ເມື່ອພາລະກິດຂອງເຮົາສິ້ນສຸດລົງ, ເຮົາຈະບໍ່ສະແຫວງຫາ "ເງິນຊ່ວຍເຫຼືອ" ນີ້ຈາກມະນຸດອີກຕໍ່ໄປ; ກົງກັນຂ້າມ, ເຮົາຈະປະຕິບັດໜ້າທີ່ຕາມທຳມະຊາດຂອງເຮົາ ແລະ ຈະນຳ "ສິ່ງຕ່າງໆໃນເຮືອນຂອງເຮົາ" ທັງໝົດລົງມາໃຫ້ກັບຜູ້ຄົນເພື່ອຄວາມເບີກບານໃຈຂອງພວກເຂົາ. ໃນປັດຈຸບັນ, ທຸກຄົນແມ່ນຖືກທົດສອບທ່າມກາງການທົດລອງຂອງເຮົາ. ເມື່ອມືຂອງເຮົາມາເຖິງມະນຸດຢ່າງເປັນທາງການ, ຜູ້ຄົນຈະບໍ່ຫຼຽວເບິ່ງເຮົາດ້ວຍສາຍຕາທີ່ຊື່ນຊົມອີກຕໍ່ໄປ, ແຕ່ຈະປະຕິບັດຕໍ່ເຮົາດ້ວຍຄວາມກຽດຊັງ ແລະ

ໃນຊ່ວງເວລານີ້ ຫົວໃຈຂອງພວກເຂົາຈະຖືກເຈາະອອກມາທັນທີເພື່ອນຳເອົາມາເປັນຕົວຢ່າງ. ເຮົາວິເຄາະເບິ່ງຫົວໃຈຂອງມະນຸດພາຍໃຕ້ "ກ້ອງຈຸລະທັດ", ເຫັນວ່າ ບໍ່ມີຄວາມຮັກທີ່ແທ້ຈິງສຳລັບເຮົາໃນທີ່ນັ້ນເລີຍ. ເປັນເວລາຫຼາຍປີ, ຜູ້ຄົນໄດ້ຫຼອກລວງເຮົາ ແລະ ລໍ້ລວງເຮົາ, ມັນກາຍເປັນວ່າທັງຫ້ອງເທິງເບື້ອງຊ້າຍ ແລະ ຫ້ອງລຸ່ມເບື້ອງຂວາຂອງຫົວໃຈຂອງພວກເຂົາປະກອບດ້ວຍພິດແຫ່ງຄວາມກຽດຊັງຕໍ່ເຮົາ. ຈຶ່ງບໍ່ແປກໃຈເລີຍທີ່ວ່າ ເປັນຫຍັງເຮົາຈຶ່ງມີທ່າທີແບບນັ້ນຕໍ່ພວກເຂົາ. ເຖິງຢ່າງໃດກໍຕາມ ພວກເຂົາແມ່ນຍັງຂາດຄວາມຮູ້ໃນສິ່ງນີ້ແທ້ໆ ແລະ ບໍ່ຍອມຮັບຮູ້ກ່ຽວກັບສິ່ງນັ້ນ. ເມື່ອເຮົາສະແດງຜົນຂອງການກວດສອບຂອງພວກເຂົາ, ພວກເຂົາກໍຍັງບໍ່ຕື່ນຂຶ້ນ; ມັນເປັນຄືກັບວ່າ ໃນຄວາມຄິດຂອງພວກເຂົາ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນເລື່ອງໃນອະດີດ ແລະ ບໍ່ຄວນເວົ້າເຖິງໃນປັດຈຸບັນ. ສະນັ້ນ ຜູ້ຄົນພຽງແຕ່ຫຼຽວເບິ່ງ "ຜົນຈາກຫ້ອງທົດລອງ" ດ້ວຍຄວາມເມີນເສີຍ. ພວກເຂົາຍື່ນເຈັ້ຍຂອງການກວດສອບຄືນ ແລະ ຍ່າງໜີ. ຍິ່ງໄປກວ່ານັ້ນ, ພວກເຂົາຍັງເວົ້າວ່າ "ສິ່ງເຫຼົ່ານີ້ບໍ່ສຳຄັນ, ມັນບໍ່ມີຜົນກະທົບຕໍ່ສຸຂະພາບຂອງຂ້ານ້ອຍ". ພວກເຂົາຍິ້ມແບບດູຖູກເລັກນ້ອຍ ແລະ ຫຼັງຈາກນັ້ນກໍເຮັດສາຍຕາຂົ່ມຂູ່ເລັກນ້ອຍ, ຄືກັບໝາຍຄວາມວ່າ ເຮົາບໍ່ຄວນເຮັດໄຮ້ດຽງສາແບບນັ້ນ, ເຮົາຕ້ອງເຮັດພໍເປັນພິທີ. ມັນຄືກັບວ່າ ການທີ່ເຮົາເປີດເຜີຍຄວາມລັບພາຍໃນຂອງພວກເຂົາໄດ້ທຳລາຍ "ກົດເກນ" ຂອງມະນຸດ ແລະ ສະນັ້ນ ພວກເຂົາຈຶ່ງກຽດຊັງເຮົາຫຼາຍຂຶ້ນ. ມີແຕ່ເມື່ອນັ້ນ ເຮົາຈຶ່ງໄດ້ເຫັນແຫຼ່ງທີ່ມາຂອງຄວາມກຽດຊັງຂອງຜູ້ຄົນ. ນີ້ກໍຍ້ອນວ່າ ເມື່ອເຮົາເຝົ້າເບິ່ງ, ເລືອດຂອງພວກເຂົາກໍໄຫຼ ແລະ ຫຼັງຈາກທີ່ໄຫຼຜ່ານເສັ້ນເລືອດໃນຮ່າງກາຍຂອງພວກເຂົາ ມັນກໍເຂົ້າສູ່ຫົວໃຈ ແລະ ໃນເວລານີ້ເອງທີ່ເຮົາໄດ້ "ຄົ້ນພົບ" ສິ່ງໃໝ່. ແຕ່ຜູ້ຄົນບໍ່ໄດ້ຄິດເຖິງສິ່ງນີ້ເລີຍ. ພວກເຂົາບໍ່ລະມັດລະວັງແທ້ໆ ແລະ ພວກເຂົາບໍ່ຄິດໃນສິ່ງທີ່ພວກເຂົາຈະໄດ້ຮັບ ຫຼື ເສຍ ເຊິ່ງນັ້ນກໍພຽງພໍທີ່ສະແດງໃຫ້ເຫັນວ່າວິນຍານແຫ່ງຄວາມອຸທິດຕົນຢ່າງ "ບໍ່ເຫັນແກ່ຕົວ" ຂອງພວກເຂົາແລ້ວ. ພວກເຂົາບໍ່ຄຳນຶງເຖິງສະພາວະສຸຂະພາບຂອງພວກເຂົາເອງ ແລະ "ເຮັດວຽກໜັກ" ເພື່ອເຮົາ. ສິ່ງນີ້ຍັງເປັນ "ຄວາມຊື່ສັດ" ຂອງພວກເຂົາ ແລະ ເປັນສິ່ງທີ່ "ໜ້າສັນລະເສີນ" ກ່ຽວກັບພວກເຂົາ, ສະນັ້ນ ເຮົາຈຶ່ງສົ່ງໜັງສື "ຍ້ອງຍໍ" ໃຫ້ກັບພວກເຂົາອີກຄັ້ງ, ເພື່ອວ່າພວກເຂົາອາດຖືກເຮັດໃຫ້ມີຄວາມສຸກອີກຄັ້ງດ້ວຍສິ່ງນີ້. ແຕ່ເມື່ອພວກເຂົາອ່ານ "ໜັງສື" ນີ້, ພວກເຂົາກໍຮູ້ສຶກລຳຄານທັນທີ, ຍ້ອນທຸກສິ່ງທີ່ພວກເຂົາເຮັດແມ່ນຖືກປະຕິເສດໂດຍໜັງສືຂອງເຮົາ. ເຮົາຊີ້ນຳຜູ້ຄົນໃນເວລາທີ່ພວກເຂົາປະຕິບັດຕົນຢູ່ສະເໝີ, ແຕ່ມັນເບິ່ງຄືກັບວ່າ ພວກເຂົາກຽດຊັງພຣະທຳຂອງເຮົາ; ສະນັ້ນ ທັນທີທີ່ເຮົາອ້າປາກຂອງເຮົາອອກ, ພວກເຂົາກໍຫຼັບຕາຂອງພວກເຂົາຢ່າງສະນິດ ແລະ ເອົາມືອັດຫູຂອງພວກເຂົາໄວ້. ພວກເຂົາບໍ່ເບິ່ງເຮົາດ້ວຍຄວາມເຄົາລົບນັບຖື ຍ້ອນຄວາມຮັກຂອງເຮົາ, ແຕ່ກຽດຊັງເຮົາ ຍ້ອນເຮົາເປີດເຜີຍຂໍ້ບົກຜ່ອງຂອງພວກເຂົາ, ເປີດໂປງສິ່ງຕ່າງໆທີ່ຢູ່ໃນການຄອບຄອງຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຂາດທຶນໃນການເຮັດທຸລະກິດຂອງພວກເຂົາ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງພວກເຂົາສູນຫາຍ. ດັ່ງນັ້ນ ຄວາມກຽດຊັງທີ່ພວກເຂົາມີຕໍ່ເຮົາຈຶ່ງເພີ່ມຂຶ້ນ.

ວັນທີ 14 ເມສາ 1992

# ບົດທີ 33

ໃນເຮືອນຂອງເຮົາ ຄັ້ງໜຶ່ງເຄີຍມີຄົນສັນລະເສີນຊື່ບໍລິສຸດຂອງເຮົາ ແລະ ຜູ້ທີ່ເຮັດພາລະກິດທີ່ບໍ່ຮູ້ຈັກເມື່ອຍ ເພື່ອວ່າລັດສະໝີຂອງເຮົາຢູ່ເທິງແຜ່ນດິນໂລກຈະມີເຕັມທ້ອງຟ້າ. ເພາະສິ່ງນີ້ ເຮົາຈຶ່ງມີຄວາມສຸກຫຼາຍ ແລະ ໃຈຂອງເຮົາກໍເຕັມໄປດ້ວຍຄວາມເບີກບານ ແຕ່ມີໃຜແດ່ທີ່ສາມາດເຮັດພາລະກິດແທນເຮົາ ແລະ ອົດລັບອົດນອນທັງກາງຄືນ ແລະ ກາງເວັນ? ຄວາມເດັດດ່ຽວຂອງມະນຸດທີ່ຢູ່ຕໍ່ໜ້າເຮົາໄດ້ມອບຄວາມສຸກໃຫ້ແກ່ເຮົາ ແຕ່ຄວາມກະບົດຂອງເຂົາແມ່ນເຮັດໃຫ້ເຮົາໃຈຮ້າຍ ແລະ ດ້ວຍເຫດນັ້ນ ຍ້ອນມະນຸດບໍ່ສາມາດປະຕິບັດຕາມໜ້າທີ່ຂອງຕົນ ເຮົາຈຶ່ງເສຍໃຈກັບພວກເຂົາຫຼາຍທີ່ສຸດ. ເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດອຸທິດຕົນເພື່ອເຮົາສະເໝີ? ເປັນຫຍັງພວກເຂົາຈຶ່ງພະຍາຍາມຕໍ່ລອງກັບເຮົາຕະຫຼອດເວລາ? ເຮົາແມ່ນຜູ້ຈັດການທົ່ວໄປຂອງສູນການຄ້າບໍ? ເປັນຫຍັງເຮົາຈຶ່ງຕ້ອງເຮັດສິ່ງທີ່ຜູ້ຄົນຕ້ອງການໃຫ້ສຳເລັດຢ່າງພໍໃຈ ແຕ່ສິ່ງທີ່ເຮົາຂໍຈາກມະນຸດແມ່ນບໍ່ມີຜົນຫຍັງ? ເປັນໄປໄດ້ບໍທີ່ເຮົາບໍ່ຊຳນານໃນດ້ານທຸລະກິດ ແຕ່ມະນຸດພັດຊຳນານທາງດ້ານນັ້ນ? ເປັນຫຍັງຜູ້ຄົນຈຶ່ງຫຼອກລວງເຮົາດ້ວຍຄຳເວົ້າທີ່ມີຄາລົມ ແລະ ແບບປະຈົບປະແຈງ? ເປັນຫຍັງຜູ້ຄົນຈຶ່ງມາມອບ “ຂອງຂວັນ” ໃຫ້ເຮົາຕະຫຼອດ ແຕ່ຖາມຫາທາງເຂົ້າດ້ານຫຼັງ? ນີ້ແມ່ນສິ່ງທີ່ເຮົາສອນໃຫ້ມະນຸດບໍ? ເປັນຫຍັງຜູ້ຄົນຈຶ່ງເຮັດສິ່ງດັ່ງກ່າວຢ່າງໄວ ແລະ ສະອາດ? ເປັນຫຍັງຜູ້ຄົນຈຶ່ງມີແຮງຈູງໃຈທີ່ຈະຫຼອກລວງເຮົາ? ໃນເວລາທີ່ເຮົາຢູ່ທ່າມກາງມະນຸດ, ຜູ້ຄົນໄດ້ເບິ່ງເຮົາເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນ; ໃນເວລາທີ່ເຮົາຢູ່ສະຫວັນຊັ້ນສາມ ພວກເຂົາກໍຖືເອົາເຮົາເປັນອົງຊົງລິດທານຸພາບສູງສຸດ ຜູ້ທີ່ປົກຄອງທຸກສິ່ງທຸກຢ່າງ; ໃນເວລາທີ່ເຮົາຢູ່ເທິງຟ້າ ພວກເຂົາແມ່ນເຫັນເຮົາເປັນພຣະວິນຍານທີ່ເຕີມເຕັມທຸກສິ່ງ. ໂດຍລວມແລ້ວ ແມ່ນບໍ່ມີບ່ອນທີ່ເໝາະສົມສຳລັບເຮົາໃນໃຈຂອງຜູ້ຄົນເລີຍ. ເປັນຄືກັບວ່າ ເຮົາເປັນແຂກທີ່ບໍ່ໄດ້ຖືກຮັບເຊີນ, ຜູ້ຄົນກຽດຊັງເຮົາ ແລະ ດ້ວຍເຫດນັ້ນ ໃນເວລາທີ່ເຮົາຈັບເອົາປີ້ ແລະ ນັ່ງຢູ່ບ່ອນນັ່ງຂອງເຮົາພວກເຂົາກໍໄລ່ເຮົາອອກ ແລະ ເວົ້າວ່າ ບໍ່ມີບ່ອນໃຫ້ເຮົານັ່ງຢູ່ນີ້ ແລະ ເຮົາໄດ້ມາຜິດບ່ອນ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງບໍ່ມີທາງເລືອກ ນອກຈາກຈະອອກໄປດ້ວຍຄວາມໂກດຮ້າຍ. ເຮົາຕັດສິນໃຈທີ່ຈະບໍ່ພົວພັນກັບມະນຸດອີກຕໍ່ໄປ ເນື່ອງຈາກວ່າ ຜູ້ຄົນໃຈແຄບ ແລະ ພວກເຂົາກໍບໍ່ມີຄວາມກວ້າງຂວາງ. ເຮົາຈະບໍ່ກິນເຂົ້າຢູ່ໂຕະດຽວກັນກັບພວກເຂົາອີກຕໍ່ໄປ, ເຮົາຈະບໍ່ໃຊ້ເວລາຢູ່ກັບພວກເຂົາຢູ່ເທິງແຜ່ນດິນໂລກອີກຕໍ່ໄປ. ແຕ່ໃນເວລາທີ່ເຮົາເວົ້າ ຜູ້ຄົນກໍຕື່ນຕົກໃຈ, ພວກເຂົາຢ້ານວ່າ ເຮົາຈະຈາກໄປ ແລະ ດ້ວຍເຫດນັ້ນ ເຂົາຈຶ່ງໄດ້ກັກຕົວເຮົາໄວ້. ເມື່ອເຫັນການທຳທ່າຂອງພວກເຂົາ ເຮົາກໍຮູ້ສຶກເສົ້າໝອງ ແລະສິ້ນຫວັງທັນທີ. ຜູ້ຄົນແມ່ນຢ້ານວ່າ ເຮົາຈະໜີປະພວກເຂົາ ແລະ ດ້ວຍເຫດນັ້ນ ເມື່ອເຮົາແຍກທາງກັບພວກເຂົາ ຈຶ່ງມີສຽງຮ້ອງໄຫ້ເຕັມໄປທົ່ວດິນແດນທັນທີ ແລະ ໃບໜ້າຂອງຜູ້ຄົນກໍເຕັມໄປດ້ວຍນໍ້າຕາ. ເຮົາເຊັດນໍ້າຕາຂອງພວກເຂົາ, ເຮົາຍົກພວກເຂົາຂຶ້ນອີກຄັ້ງ ແລະ ພວກເຂົາກໍຈ້ອງເບິ່ງເຮົາ, ເບິ່ງຄືວ່າສາຍຕາທີ່ອ້ອນວອນຂອງພວກເຂົາແມ່ນກຳລັງຮ້ອງຂໍບໍ່ໃຫ້ເຮົາໄປ ແລະ ຍ້ອນ “ຄວາມຈິງໃຈ” ຂອງພວກເຂົາ ເຮົາຈຶ່ງຢູ່ກັບພວກເຂົາ. ແຕ່ໃຜສາມາດເຂົ້າໃຈຄວາມເຈັບປວດທີ່ຢູ່ພາຍໃນໃຈຂອງເຮົາໄດ້

ແດ່? ມີໃຜສົນໃຈກັບສິ່ງຕ່າງໆທີ່ເຮົາບໍ່ສາມາດກ່າວອອກມາໄດ້ແດ່? ໃນສາຍຕາຂອງຜູ້ຄົນ, ມັນເປັນຄືວ່າ ເຮົາບໍ່ມີຄວາມຮູ້ສຶກ ແລະ ສະນັ້ນ ພວກເຮົາຈຶ່ງມາຈາກສອງຄອບຄົວທີ່ແຕກຕ່າງກັນສະເໝີ. ພວກເຂົາຈະສາມາດເຫັນຄວາມຮູ້ສຶກເສຍໃຈທີ່ຢູ່ພາຍໃນໃຈຂອງເຮົາໄດ້ບໍ? ຜູ້ຄົນມີແຕ່ປາດຖະໜາຫາຄວາມສຸກຂອງຕົວເອງ ແລະ ພວກເຂົາບໍ່ສົນໃຈຄວາມປະສົງຂອງເຮົາ ຍ້ອນວ່າ ຈົນຮອດປັດຈຸບັນຜູ້ຄົນຍັງຄົງບໍ່ຮູ້ຈຸດປະສົງຂອງແຜນການຄຸ້ມຄອງຂອງເຮົາ ແລະ ສະນັ້ນ ໃນປັດຈຸບັນ ພວກເຂົາຈຶ່ງຍັງຮ້ອງຂໍແບບງຽບໆ ແລະ ສິ່ງນີ້ມີປະໂຫຍດຫຍັງ?

ໃນເວລາທີ່ເຮົາດຳລົງຊີວິດໃນທ່າມກາງມະນຸດ ເຮົາມີບ່ອນຢືນຢູ່ໃນໃຈຂອງຜູ້ຄົນ; ຍ້ອນເຮົາປາກົດໃນເນື້ອໜັງ ແລະ ຜູ້ຄົນດຳລົງຊີວິດໃນເໜືອໜັງແບບເກົ່າ ພວກເຂົາຈຶ່ງປະຕິບັດກັບເຮົາແບບຝ່າຍເນື້ອໜັງຕະຫຼອດ. ຍ້ອນຜູ້ຄົນມີແຕ່ເນື້ອໜັງ ແລະ ບໍ່ມີເຄື່ອງປະກອບເພີ່ມເຕີມ ພວກເຂົາຈຶ່ງໄດ້ "ມອບທຸກສິ່ງທີ່ພວກເຂົາມີ" ໃຫ້ກັບເຮົາ. ແຕ່ພວກເຂົາກໍບໍ່ຮູ້ຫຍັງ, ພວກເຂົາພຽງແຕ່ "ຖວາຍຄວາມອຸທິດຕົນຂອງພວກເຂົາ" ຢູ່ຕໍ່ໜ້າເຮົາ. ສິ່ງທີ່ເຮົາໄດ້ແມ່ນຂີ້ເຫຍື້ອທີ່ບໍ່ມີຄ່າ ແຕ່ຜູ້ຄົນບໍ່ໄດ້ຄິດເຊັ່ນນັ້ນ. ເມື່ອເຮົາສົມທຽບ "ຂອງຂວັນ" ທີ່ພວກເຂົາໄດ້ມອບໃຫ້ ກັບສິ່ງຕ່າງໆຂອງເຮົາ, ຜູ້ຄົນກໍຮູ້ເຖິງຄວາມມີຄ່າຂອງເຮົາທັນທີ ແລະ ຫຼັງຈາກນັ້ນ ພວກເຂົາຈຶ່ງເຫັນຄວາມບໍ່ມີຂອບເຂດຈຳກັດຂອງເຮົາ. ເຮົາບໍ່ຮູ້ສຶກພາກພູມໃຈ ຍ້ອນການສັນລະເສີນຂອງພວກເຂົາ ແຕ່ຍັງສືບຕໍ່ປາກົດໃຫ້ມະນຸດເຫັນ ເພື່ອທຸກຄົນອາດຮູ້ຈັກເຮົາຢ່າງສົມບູນ. ໃນເວລາທີ່ເຮົາສະແດງຄວາມສົມບູນຂອງເຮົາໃຫ້ແກ່ພວກເຂົາ, ພວກເຂົາກໍເບິ່ງເຮົາດ້ວຍຕາທີ່ເປີດກວ້າງ, ຢືນຢູ່ຕໍ່ໜ້າເຮົາແບບບໍ່ເໜັງຕີງ ຄືກັບເສົາຫີນເກືອ. ເມື່ອເຮົາເຫັນຄວາມແປກປະຫຼາດຂອງພວກເຂົາ ເຮົາຈຶ່ງເກືອບບໍ່ສາມາດຢຸດຕົວເອງຈາກການຫົວຂວັນ. ຍ້ອນພວກເຂົາກຳລັງພະຍາຍາມຂໍສິ່ງຕ່າງໆຈາກເຮົາ, ເຮົາຈຶ່ງມອບສິ່ງຕ່າງໆທີ່ຢູ່ໃນມືຂອງເຮົາໃຫ້ແກ່ພວກເຂົາ ແລະ ພວກເຂົາກໍອູ້ມເອົາສິ່ງເຫຼົ່ານັ້ນໃສ່ເອິກຂອງພວກເຂົາ ຖະໜຸຖະໜອມສິ່ງເຫຼົ່ານັ້ນຄືກັບເດັກເກີດໃໝ່, ນັ້ນຄືສິ່ງທີ່ພວກເຂົາເຮັດ ແຕ່ເຮັດພຽງໃນຊ່ວງໄລຍະໜຶ່ງ. ເມື່ອເຮົາປ່ຽນສະພາບແວດລ້ອມທີ່ພວກເຂົາອາໄສຢູ່ ພວກເຂົາກໍແກວ່ງ "ເດັກເກີດໃໝ່" ໄປຂ້າງນອກທັນທີ ແລະ ແລ່ນໜີພ້ອມກັບເອົາມືງູມຫົວຂອງຕົວເອງ. ໃນສາຍຕາຂອງຜູ້ຄົນ ເຮົາແມ່ນຜູ້ຊ່ວຍທີ່ປາກົດຢູ່ ບໍ່ວ່າຈະຢູ່ໃນເວລາ ຫຼື ສະຖານທີ່ໃດກໍຕາມ, ມັນເປັນຄືກັບວ່າ ເຮົາແມ່ນພະນັກງານບໍລິການໃນຮ້ານອາຫານ ທີ່ມາທັນທີເມື່ອຖືກເອີ້ນຫາ. ສະນັ້ນ, ຜູ້ຄົນຈຶ່ງໄດ້ "ເຄົາລົບ" ເຮົາສະເໝີ ຄືກັບວ່າ ເຮົາມີພະລັງທີ່ບໍ່ຈຳກັດ ທີ່ຈະຕໍ່ສູ້ກັບຄວາມຫາຍຍະນະ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງໄດ້ຈັບມືຂອງເຮົາສະເໝີ, ນຳພາເຮົາເດີນທາງໄປທົ່ວທຸກດິນແດນ, ເພື່ອໃຫ້ທຸກສິ່ງອາດເຫັນວ່າ ພວກເຂົາມີຜູ້ປົກຄອງ ແລະ ເພື່ອວ່າ ຈະບໍ່ມີໃຜກ້າຫຼອກລວງພວກເຂົາອີກ. ເຮົາເບິ່ງກົນອຸບາຍຂອງຜູ້ຄົນອອກແຕ່ດົນແລ້ວ ກ່ຽວກັບ "ໝາຈິ້ງຈອກທີ່ສະແດງຕົນເປັນເສືອ" ເນື່ອງຈາກວ່າ ພວກເຂົາທຸກຄົນແມ່ນ "ເລີ່ມສ້າງທຸລະກິດຂອງພວກເຂົາ" ໂດຍປາດຖະໜາທີ່ຈະໄດ້ກຳໄລຜ່ານການໃຊ້ກົນອຸບາຍ. ເຮົາເບິ່ງເລ່ລ່ຽມ ແລະ ແຜນການຊົ່ວຮ້າຍຂອງພວກເຂົາອອກແຕ່ດົນແລ້ວ ແລະ ມັນເປັນພຽງແຕ່ວ່າ ເຮົາບໍ່ປາດຖະໜາທີ່ຈະເຮັດໃຫ້ສາຍພົວພັນຂອງພວກເຮົາເຈັບປວດເທົ່ານັ້ນເອງ. ເຮົາບໍ່ສ້າງເລື່ອງຈາກສິ່ງທີ່ບໍ່ເປັນເລື່ອງ. ມັນບໍ່ມີຄຸນຄ່າ ຫຼື ຄວາມສຳຄັນ

ໃນສິ່ງນັ້ນ. ເຮົາພຽງແຕ່ເຮັດພາລະກິດທີ່ເຮົາຕ້ອງເຮັດ ເນື່ອງຈາກຄວາມອ່ອນແອຂອງຜູ້ຄົນ; ຖ້າບໍ່ເຊັ່ນນັ້ນ ເຮົາກໍຈະປ່ຽນແປງພວກເຂົາໃຫ້ເປັນຂີ້ເທົ່າ ແລະ ບໍ່ອະນຸຍາດໃຫ້ພວກເຂົາມີຊີວິດຢູ່ອີກຕໍ່ໄປ. ແຕ່ພາລະກິດທີ່ເຮົາເຮັດແມ່ນມີຄວາມໝາຍ ແລະ ສະນັ້ນ ເຮົາບໍ່ໄດ້ຂ້ຽນຕີມະນຸດແບບເປົ່າໆ. ມັນເປັນເພາະເຫດຜົນນີ້ ຜູ້ຄົນຈຶ່ງໃຫ້ອິດສະຫຼະແກ່ເນື້ອໜັງຂອງພວກເຂົາຕະຫຼອດເວລາ. ພວກເຂົາບໍ່ສັງເກດເບິ່ງຄວາມປະສົງຂອງເຮົາ ແຕ່ໄດ້ລໍ້ລວງເຮົາຢູ່ຕໍ່ໜ້າບັນລັງພິພາກສາຂອງເຂົາ. ຜູ້ຄົນຈັ່ງແມ່ນກ້າຫານ: ເມື່ອເອົາ "ອຸປະກອນທໍລະມານ" ທັງໝົດມາສູ່ພວກເຂົາ, ພວກເຂົາກໍບໍ່ສັ່ນເຊັ່ນຈັກດີ້. ເມື່ອຢູ່ຕໍ່ໜ້າຄວາມຈິງ ພວກເຂົາກໍບໍ່ສາມາດລຸກຂຶ້ນມາໃຫ້ຄວາມຈິງ ແລະ ບໍ່ເຮັດຫຍັງ ນອກຈາກຂັດຂືນເຮົາຢ່າງຫົວແຂງ. ເວລາເຮົາຂໍໃຫ້ພວກເຂົາເອົາທຸກສິ່ງທີ່ສົກກະປົກອອກມາ ພວກເຂົາກໍຍັງເອົາມືເປົ່າສອງຂ້າງມາສະແດງໃຫ້ເຮົາເບິ່ງ ແລ້ວຄົນອື່ນຈະບໍ່ສາມາດໃຊ້ສິ່ງນີ້ເປັນ "ຕົວຢ່າງ" ໄດ້ແນວໃດ? ມັນເປັນເພາະວ່າ "ຄວາມເຊື່ອ" ຂອງຜູ້ຄົນແມ່ນຍິ່ງໃຫຍ່ຫຼາຍ ຈົນພວກເຂົາ "ເປັນຕານັບຖື".

ເຮົາໄດ້ເລີ່ມເຮັດພາລະກິດຂອງເຮົາທົ່ວຈັກກະວານ; ຜູ້ຄົນແຫ່ງຈັກກະວານພາກັນຕື່ນຂຶ້ນທັນທີ ແລະ ເຄື່ອນໄຫວອ້ອມຈຸດກາງພາລະກິດຂອງເຮົາ ແລະ ເມື່ອເຮົາ "ເດີນທາງ" ພາຍໃນພວກເຂົາທຸກຄົນກໍໄດ້ໜີພົ້ນຈາກຄວາມເປັນທາດຂອງຊາຕານ ແລະ ບໍ່ຖືກທໍລະມານໃນທ່າມກາງຄວາມເຈັບປວດຂອງຊາຕານອີກ. ຍ້ອນການມາເຖິງມື້ຂອງເຮົາ, ຜູ້ຄົນຈຶ່ງເຕັມໄປດ້ວຍຄວາມສຸກ, ຄວາມໂສກເສົ້າພາຍໃນໃຈຂອງພວກເຂົາແມ່ນຫາຍໄປ, ເມກແຫ່ງຄວາມເສຍໃຈໃນທ້ອງຟ້າກໍກາຍເປັນອົກຊີໃນອາກາດ ແລະ ລອຍຢູ່ເທິງຟ້າ ແລະ ໃນຂະນະນີ້ ເຮົາກໍເພີດເພີນກັບຄວາມສຸກກັບການຢູ່ຮ່ວມກັບມະນຸດ. ການກະທຳຂອງມະນຸດໄດ້ມອບບາງຢ່າງໃຫ້ເຮົາຊີມລົດຊາດ ແລະ ສະນັ້ນ ເຮົາຈຶ່ງບໍ່ເສຍໃຈອີກຕໍ່ໄປ. ສິ່ງທີ່ມາພ້ອມກັບການມາເຖິງຂອງມື້ຂອງເຮົາກໍຄື ສິ່ງຕ່າງໆຂອງແຜ່ນດິນໂລກທີ່ມີພະລັງໄດ້ຮັບພື້ນຖານຂອງການມີຢູ່ຂອງພວກເຂົາກັບຄືນມາ, ທຸກສິ່ງເທິງແຜ່ນດິນໂລກແມ່ນມີຊີວິດໃໝ່ອີກຄັ້ງ ແລະ ພວກເຂົາຖືເອົາເຮົາເປັນພື້ນຖານຂອງການມີຢູ່ຂອງພວກເຂົາ ເນື່ອງຈາກເຮົາເຮັດໃຫ້ທຸກສິ່ງສ່ອງແສງໄປຂ້າງໜ້າພ້ອມກັບຊີວິດ ແລະ ດ້ວຍເຫດນັ້ນ ເຮົາກໍເຮັດໃຫ້ພວກເຂົາຫາຍໄປຢ່າງງຽບໆເຊັ່ນກັນ. ສະນັ້ນ, ທຸກສິ່ງຈຶ່ງລໍຖ້າຄຳສັ່ງຈາກປາກຂອງເຮົາ ແລະ ມີຄວາມສຸກກັບສິ່ງທີ່ເຮົາເຮັດ ແລະ ເວົ້າ. ໃນທ່າມກາງທຸກສິ່ງ ເຮົາແມ່ນຜູ້ສູງສົ່ງທີ່ສຸດ ແຕ່ເຮົາຍັງດຳລົງຊີວິດຢູ່ໃນທ່າມກາງທຸກຄົນ ແລະ ເຮົາໃຊ້ການກະທຳຂອງມະນຸດເປັນການສະແດງອອກຂອງການຊົງສ້າງສະຫວັນ ແລະ ແຜ່ນດິນໂລກຂອງເຮົາ. ໃນເວລາທີ່ຜູ້ຄົນພາກັນໃຫ້ຄວາມຍົກຍ້ອງຢ່າງຍິ່ງໃຫຍ່ຢູ່ຕໍ່ໜ້າເຮົາ, ເຮົາກໍຖືກສັນລະເສີນໃນທ່າມກາງທຸກສິ່ງ ແລະ ສະນັ້ນ ດອກໄມ້ເທິງແຜ່ນດິນໂລກກໍເບັ່ງບານຂຶ້ນພາຍໃຕ້ດວງຕາເວັນທີ່ອົບອຸ່ນ, ຫຍ້າກໍຂຽວງາມຂຶ້ນ ແລະ ເບິ່ງຄືວ່າ ເມກໃນທ້ອງຟ້າກໍເປັນສີຟ້າສົດໃສຫຼາຍຂຶ້ນ. ເພາະສຽງຂອງເຮົາ ຜູ້ຄົນຈຶ່ງແລ່ນໄປບ່ອນນີ້ ແລະ ບ່ອນນັ້ນ; ໃນປັດຈຸບັນ ໃບໜ້າຂອງປະຊາຊົນໃນອານາຈັກຂອງເຮົາແມ່ນເຕັມໄປດ້ວຍຄວາມສຸກ ແລະ ຊີວິດຂອງພວກເຂົາກໍເຕີບໃຫຍ່ຂຶ້ນ. ເຮົາເຮັດພາລະກິດໃນທ່າມກາງທຸກຄົນທີ່ເຮົາເລືອກ ແລະ ບໍ່ຍອມໃຫ້ພາລະກິດຂອງເຮົາມີຮອຍດ່າງຈາກແນວຄິດຂອງມະນຸດ ເນື່ອງຈາກວ່າ ເຮົາປະຕິບັດພາລະກິດຂອງເຮົາດ້ວຍຕົວເອງ. ໃນເວລາທີ່ເຮົາເຮັດພາລະກິດ

ສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທີ່ຢູ່ໃນສິ່ງເຫຼົ່ານັ້ນແມ່ນໄດ້ປ່ຽນແປງ ແລະ ຖືກສ້າງຂຶ້ນໃໝ່ ແລະ ໃນເວລາທີ່ເຮົາເຮັດພາລະກິດຂອງເຮົາສຳເລັດ ມະນຸດກໍຈະຖືກສ້າງຂຶ້ນໃໝ່ຢ່າງສົມບູນ ໂດຍທີ່ເຂົາຈະບໍ່ໄດ້ດຳລົງຊີວິດຢູ່ໃນຄວາມໂສກເສົ້າເສຍໃຈອີກຕໍ່ໄປ ຍ້ອນສິ່ງທີ່ເຮົາຮ້ອງຂໍ, ເນື່ອງຈາກສຽງແຫ່ງຄວາມສຸກແມ່ນດັງໄປທົ່ວແຜ່ນດິນໂລກ ແລະ ເຮົາຖືເອົາໂອກາດນີ້ ເພື່ອປະທານພອນໃຫ້ແກ່ມະນຸດ. ໃນເວລາທີ່ເຮົາເປັນກະສັດຂອງອານາຈັກ ຜູ້ຄົນກໍຢຳເກງເຮົາ ແຕ່ໃນເວລາທີ່ເຮົາເປັນກະສັດໃນທ່າມກາງມະນຸດ ແລະ ດຳລົງຊີວິດໃນທ່າມກາງມະນຸດ ຜູ້ຄົນແມ່ນບໍ່ມີຄວາມສຸກກັບເຮົາ ເນື່ອງຈາກວ່າ ແນວຄິດຂອງພວກເຂົາທີ່ມີຕໍ່ເຮົາແມ່ນຮ້າຍແຮງຫຼາຍ ທີ່ຖືກຝັງເລິກຈົນຍາກທີ່ຈະຖອນອອກໄດ້. ເພາະການສະແດງອອກຂອງມະນຸດ ເຮົາຈຶ່ງເຮັດພາລະກິດຂອງເຮົາ ເຊິ່ງເໝາະສົມ ແລະ ໃນເວລາທີ່ເຮົາລອຍຂຶ້ນເທິງຟ້າ ແລະ ປ່ອຍຄວາມໂກດຮ້າຍຂອງເຮົາໃສ່ມະນຸດ ຄວາມເຫັນຕ່າງໆຂອງຜູ້ຄົນທີ່ມີຕໍ່ເຮົາກໍຈະກາຍເປັນຂີ້ເທົ່າທັນທີ. ເຮົາຂໍໃຫ້ພວກເຂົາສະແດງແນວຄວາມຄິດຂອງພວກເຂົາທີ່ມີຕໍ່ເຮົາຫຼາຍຂຶ້ນ ແຕ່ພວກເຂົາກໍຕົກຕະລຶງຈົນເວົ້າບໍ່ອອກ ຄືກັບວ່າ ພວກເຂົາບໍ່ມີຫຍັງຈະເວົ້າ ແລະ ຄືກັບວ່າພວກເຂົາຖ່ອມຕົວ. ຍິ່ງເຮົາອາໄສຢູ່ໃນແນວຄິດຂອງຜູ້ຄົນຫຼາຍເທົ່າໃດ ພວກເຂົາກໍຍິ່ງຮັກເຮົາຫຼາຍຂຶ້ນເທົ່ານັ້ນ ແລະ ຍິ່ງເຮົາອາໄສຢູ່ນອກແນວຄິດຂອງຜູ້ຄົນຫຼາຍສໍ່າໃດ ພວກເຂົາກໍຍິ່ງຢູ່ຫ່າງອອກຈາກເຮົາຫຼາຍຊໍ່ານັ້ນ ແລະ ພວກເຂົາຍິ່ງມີຄວາມເຫັນກ່ຽວກັບເຮົາຫຼາຍຂຶ້ນນັບແຕ່ຕອນທີ່ເຮົາໄດ້ສ້າງໂລກຈົນຮອດປັດຈຸບັນ ນັ້ນກໍເປັນເພາະວ່າ ເຮົາໄດ້ອາໄສຢູ່ໃນແນວຄິດຂອງຜູ້ຄົນຕະຫຼອດເວລາ. ໃນເວລາທີ່ເຮົາມາຢູ່ໃນທ່າມກາງມະນຸດໃນປັດຈຸບັນ ເຮົາໄດ້ກຳຈັດແນວຄິດຂອງຜູ້ຄົນທັງໝົດ ແລະ ຜູ້ຄົນແມ່ນໄດ້ແຕ່ປະຕິເສດ ແຕ່ເຮົາມີວິທີການຢ່າງເໝາະສົມ ທີ່ຈະຈັດການກັບແນວຄິດຂອງພວກເຂົາ. ຜູ້ຄົນບໍ່ຄວນກັງວົນ ຫຼື ກະວົນກະວາຍ; ເຮົາຈະຊ່ວຍມະນຸດທຸກຄົນໃຫ້ລອດພົ້ນດ້ວຍວິທີການຂອງເຮົາເອງ, ເຮັດໃຫ້ທຸກຄົນຮັກເຮົາ ແລະ ຍອມໃຫ້ພວກເຂົາມີຄວາມສຸກກັບພອນຂອງເຮົາໃນສະຫວັນ.

ວັນທີ 17 ເມສາ 1992

# ບົດທີ 34

ຄັ້ງໜຶ່ງເຮົາໄດ້ເຊີນມະນຸດມາເຮືອນຂອງເຮົາໃນຖານະແຂກ ແຕ່ເຂົາແລ່ນໄປບ່ອນນັ້ນ ແລະ ບ່ອນນີ້ ຍ້ອນການຮຽກເອີ້ນຂອງເຮົາ ຄືກັບວ່າ ແທນທີ່ຈະເຊີນເຂົາໃນຖານະເປັນແຂກ ເຮົາໄດ້ນໍາເອົາເຂົາໄປສູ່ເດີ່ນປະຫານ. ສະນັ້ນ, ເຮືອນຂອງເຮົາຈຶ່ງຖືກປະໃຫ້ເປົ່າວ່າງ ເນື່ອງຈາກມະນຸດຫຼີກເວັ້ນເຮົາຕະຫຼອດ ແລະ ໄດ້ລະແວງເຮົາຢູ່ສະເໝີ. ສິ່ງນີ້ເຮັດໃຫ້ເຮົາບໍ່ມີຫົນທາງປະຕິບັດພາກສ່ວນຂອງພາລະກິດຂອງເຮົາ ເຊິ່ງໝາຍຄວາມວ່າ ເຮົາໄດ້ເອົາອາຫານທີ່ເຮົາໄດ້ຈັດຕຽມໄວ້ໃຫ້ເຂົານັ້ນກັບຄືນມາ ເນື່ອງຈາກວ່າມະນຸດບໍ່ເຕັມໃຈທີ່ຈະກິນອາຫານນີ້ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງບໍ່ໄດ້ບັງຄັບໃຫ້ເຂົາກິນ. ແຕ່ມະນຸດກໍພົບວ່າຕົນເອງຕົກຢູ່ໃນຄວາມອຶດຫິວຢ່າງກະທັນຫັນ ເຂົາຈຶ່ງມາເຄາະປະຕູຂອງເຮົາເພື່ອຂໍຄວາມຊ່ວຍເຫຼືອຈາກເຮົາ. ເມື່ອເຫັນເຂົາຢູ່ໃນຄວາມທຸກທີ່ຮ້າຍແຮງດັ່ງກ່າວ ເຮົາຈະບໍ່ຊ່ວຍເຂົາໄດ້ແນວໃດ? ສະນັ້ນ, ເຮົາຈຶ່ງຈັດວາງອາຫານໃຫ້ມະນຸດອີກຄັ້ງ ເພື່ອເຂົາຈະໄດ້ກິນມັນ ແລະ ພຽງຫຼັງຈາກນັ້ນ ເຂົາຈຶ່ງຮູ້ສຶກວ່າເຮົາເປັນຕາເຊີດຊູສໍ່າໃດ ແລະ ດ້ວຍເຫດນັ້ນ ເຂົາຈຶ່ງມາເພິ່ງພາເຮົາ. ຍ້ອນທັດສະນະຄະຕິຂອງເຮົາທີ່ມີຕໍ່ເຂົາ, ເຂົາຈຶ່ງມາຮັກເຮົາເທື່ອລະໜ້ອຍ "ໂດຍບໍ່ມີຂໍ້ຈໍາກັດ" ແລະ ເຂົາບໍ່ສົງໄສວ່າ ເຮົາຈະສົ່ງເຂົາໄປສູ່ "ດິນແດນແຫ່ງການເຜົາສົບ" ອີກຕໍ່ໄປ ຍ້ອນວ່າ ນີ້ບໍ່ແມ່ນຄວາມປະສົງຂອງເຮົາ. ສະນັ້ນ, ຫຼັງຈາກທີ່ໄດ້ເຫັນຫົວໃຈຂອງເຮົາ ມະນຸດຈຶ່ງເພິ່ງພາເຮົາຢ່າງແທ້ຈິງ ເຊິ່ງສະແດງໃຫ້ເຫັນວ່າເຂົາ "ລະມັດລະວັງ" ສໍ່າໃດ. ແຕ່ເຮົາກໍບໍ່ໄດ້ລະວັງມະນຸດ ຍ້ອນຄວາມຫຼອກລວງຂອງເຂົາ ແຕ່ກົງກັນຂ້າມເຮົາດຶງໃຈຜູ້ຄົນດ້ວຍອ້ອມກອດທີ່ອົບອຸ່ນຂອງເຮົາ. ນີ້ບໍ່ແມ່ນສິ່ງທີ່ເຮົາກໍາລັງປະຕິບັດໃນປັດຈຸບັນບໍ? ນີ້ບໍ່ແມ່ນສິ່ງທີ່ສະແດງອອກໃນຜູ້ຄົນໃນປັດຈຸບັນບໍ? ເປັນຫຍັງພວກເຂົາຈຶ່ງສາມາດເຮັດສິ່ງດັ່ງກ່າວ? ເປັນຫຍັງພວກເຂົາຈຶ່ງມີຄວາມຮູ້ສຶກດັ່ງກ່າວ? ເປັນຍ້ອນພວກເຂົາຮູ້ຈັກເຮົາຢ່າງແທ້ຈິງບໍ? ເປັນຍ້ອນພວກເຂົາມີຄວາມຮັກທີ່ບໍ່ມີຂອບເຂດສໍາລັບເຮົາຢ່າງແທ້ຈິງບໍ? ເຮົາບໍ່ບັງຄັບຜູ້ໃດໃຫ້ຮັກເຮົາ, ພຽງແຕ່ມອບອິດສະຫຼະໃຫ້ແກ່ພວກເຂົາ ເພື່ອໃຫ້ພວກເຂົາຕັດສິນໃຈດ້ວຍຕົວເອງ; ດ້ວຍວິທີນີ້, ເຮົາຈະບໍ່ລົບກວນ ຫຼື ຊ່ວຍພວກເຂົາໃນການຕັດສິນໃຈກ່ຽວກັບຊະຕາກໍາຂອງພວກເຂົາ. ຜູ້ຄົນໄດ້ຕັ້ງໝັ້ນຢູ່ຕໍ່ໜ້າເຮົາ, ພວກເຂົາໄດ້ນໍາມັນມາຢູ່ຕໍ່ໜ້າເຮົາເພື່ອໃຫ້ເຮົາສໍາຫຼວດ ແລະ ເມື່ອເຮົາເປີດຖົງທີ່ມີ "ຄວາມຕັ້ງໝັ້ນຂອງມະນຸດ" ເຮົາກໍເຫັນສິ່ງຕ່າງໆຢູ່ຂ້າງໃນ ເຊິ່ງເຖິງແມ່ນວ່າຈະສັບສົນ ແຕ່ກໍຂ້ອນຂ້າງຈະ "ອຸດົມສົມບູນ". ຜູ້ຄົນແນມເບິ່ງເຮົາດ້ວຍດວງຕາທີ່ເປີດກວ້າງ ໂດຍຢ້ານຢູ່ເລິກໆວ່າ ເຮົາຈະດຶງຄວາມຕັ້ງໝັ້ນຂອງພວກເຂົາອອກມາ. ແຕ່ຍ້ອນຄວາມອ່ອນແອຂອງມະນຸດ ເຮົາຈຶ່ງບໍ່ໄດ້ຕັດສິນແຕ່ທໍາອິດ ແລະ ກົງກັນຂ້າມ ເຮົາປິດຖົງ ແລະ ສືບຕໍ່ປະຕິບັດພາລະກິດທີ່ເຮົາຕ້ອງປະຕິບັດ. ຢ່າງໃດກໍຕາມ, ມະນຸດບໍ່ໄດ້ເຂົ້າສູ່ການນໍາພາຂອງເຮົາຍ້ອນພາລະກິດຂອງເຮົາ ແຕ່ສືບຕໍ່ໃສ່ໃຈຕົວເອງກັບເລື່ອງທີ່ວ່າເຮົາໄດ້ສັນລະເສີນຄວາມຕັ້ງໝັ້ນຂອງເຂົາແລ້ວ ຫຼື ບໍ່. ເຮົາໄດ້ປະຕິບັດພາລະກິດຫຼາຍຢ່າງ ແລະ ໄດ້ກ່າວພຣະທໍາຫຼາຍຂໍ້ ແຕ່ຈົນເຖິງປັດຈຸບັນ ມະນຸດກໍຍັງບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ ແລະ ດ້ວຍເຫດນັ້ນ ທຸກການກະທໍາທີ່ສັບສົນຂອງເຂົາຈຶ່ງເຮັດໃຫ້ຫົວຂອງເຮົາປິ່ນ. ເປັນຫຍັງເຂົາຈຶ່ງບໍ່ສາມາດ

ເຂົ້າໃຈຄວາມປະສົງຂອງເຮົາ ແລະ ເຮັດສິ່ງຕ່າງໆຕາມໃຈຕົວເອງຢ່າງບໍ່ຮອບຄອບ? ສະໝອງຂອງເຂົາໄດ້ຮັບການສະເທືອນບໍ? ເປັນໄປໄດ້ບໍທີ່ເຂົາບໍ່ເຂົ້າໃຈພຣະທຳທີ່ເຮົາກ່າວ? ເປັນຫຍັງເຂົາຈຶ່ງປະຕິບັດດ້ວຍສາຍຕາຂອງເຂົາແນມຊື່ໄປທາງໜ້າສະເໝີ ແຕ່ກໍບໍ່ສາມາດປູທາງ ແລະ ເປັນຕົວຢ່າງໃຫ້ກັບຜູ້ຄົນໃນອະນາຄົດໄດ້? ມີຜູ້ໃດເປັນແບບຢ່າງກ່ອນເປໂຕບໍ? ບໍ່ແມ່ນພາຍໃຕ້ການນຳພາຂອງເຮົາບໍທີ່ເປໂຕລອດຊີວິດ? ເປັນຫຍັງຜູ້ຄົນໃນປັດຈຸບັນຈຶ່ງບໍ່ສາມາດເຮັດສິ່ງນີ້? ຫຼັງຈາກມີຕົວຢ່າງເພື່ອໃຫ້ເຮັດຕາມແລ້ວເປັນຫຍັງພວກເຂົາຈຶ່ງຍັງບໍ່ສາມາດປະຕິບັດຕາມຄວາມປະສົງຂອງເຮົາ? ສິ່ງນີ້ສະແດງໃຫ້ເຫັນວ່າມະນຸດຍັງບໍ່ເຊື່ອໃຈເຮົາ ເຊິ່ງເປັນສິ່ງທີ່ນຳໄປສູ່ສະພາບທີ່ໜ້າເສົ້າໃຈໃນປັດຈຸບັນ.

ເຮົາດີໃຈທີ່ໄດ້ສັງເກດເຫັນນົກໂຕນ້ອຍໆບິນໃນທ້ອງຟ້າ. ເຖິງວ່າພວກມັນຍັງບໍ່ໄດ້ມີຄວາມຕັ້ງໝັ້ນ ຢູ່ຕໍ່ໜ້າເຮົາ ແລະ ບໍ່ມີຄຳເວົ້າທີ່ຈະ "ສະໜອງ" ໃຫ້ເຮົາ ແຕ່ພວກມັນກໍພົບຄວາມສຸກກັບໂລກທີ່ເຮົາມອບໃຫ້ພວກມັນ. ແຕ່ມະນຸດບໍ່ສາມາດເຮັດສິ່ງນີ້ ແລະ ໃບໜ້າຂອງເຂົາແມ່ນເຕັມໄປດ້ວຍຄວາມໂສກເສົ້າ. ເປັນໄປໄດ້ບໍທີ່ເຮົາຕິດໜີ້ເຂົາໂດຍທີ່ບໍ່ສາມາດຈ່າຍໄດ້? ເປັນຫຍັງໃບໜ້າຂອງເຂົາຈຶ່ງເຕັມໄປດ້ວຍນ້ຳຕາ? ເຮົາຊື່ນຊົມດອກລີລີ້ທີ່ບານຢູ່ເນີນພູ; ດອກໄມ້ ແລະ ຫຍ້າແຜ່ໄປທົ່ວເນີນແຕ່ດອກລີລີ້ເພີ່ມແສງສະຫວ່າງໃຫ້ກັບລັດສະໝີຂອງເຮົາເທິງແຜ່ນດິນໂລກກ່ອນລະດູໃບໄມ້ປົ່ງຈະມາຮອດ. ມະນຸດສາມາດບັນລຸສິ່ງດັ່ງກ່າວໄດ້ບໍ? ເຂົາສາມາດເປັນພະຍານໃຫ້ເຮົາເທິງແຜ່ນດິນໂລກກ່ອນການກັບມາຂອງເຮົາໄດ້ບໍ? ເຂົາສາມາດອຸທິດຕົນເອງເພື່ອນາມຂອງເຮົາໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ໄດ້ບໍ? ມັນເປັນຄືກັບວ່າ ການກ່າວພຣະຄຳຂອງເຮົາແມ່ນເຕັມໄປດ້ວຍການຮຽກຮ້ອງຕໍ່ມະນຸດ. ດັ່ງນັ້ນ ເຂົາຈຶ່ງກຽດຊັງເຮົາຍ້ອນການຮຽກຮ້ອງເຫຼົ່ານີ້; ເຂົາຢ້ານພຣະທຳຂອງເຮົາຍ້ອນຮ່າງກາຍຂອງເຂົາອ່ອນແອເກີນໄປ ແລະ ໂດຍພື້ນຖານແລ້ວ ເຂົາບໍ່ສາມາດບັນລຸສິ່ງທີ່ເຮົາຂໍ. ເມື່ອເຮົາເປີດປາກຂອງເຮົາ, ເຮົາເຫັນຜູ້ຄົນເທິງແຜ່ນດິນໂລກແລ່ນໜີໄປທຸກທິດທາງ ຄືກັບວ່າ ກຳລັງພະຍາຍາມໜີຈາກຄວາມອຶດຢາກ. ເມື່ອເຮົາປິດໜ້າຂອງເຮົາ ແລະ ເມື່ອເຮົາຫັນໂຕຂອງເຮົາ ຜູ້ຄົນກໍຖືກໂຈມຕີດ້ວຍຄວາມຕົກໃຈຢ້ານທັນທີ. ພວກເຂົາບໍ່ຮູ້ວ່າຈະເຮັດຫຍັງ ຍ້ອນພວກເຂົາຢ້ານການຈາກໄປຂອງເຮົາ; ໃນແນວຄິດຂອງພວກເຂົາ, ມື້ທີ່ເຮົາຈາກໄປຈະເປັນມື້ທີ່ຄວາມພິນາດໄດ້ລົງມາຈາກສະຫວັນເຊິ່ງກໍຄືມື້ທີ່ການລົງໂທດຂອງພວກເຂົາຈະເລີ່ມຕົ້ນຂຶ້ນ. ແຕ່ສິ່ງທີ່ເຮົາເຮັດແມ່ນກົງກັນຂ້າມກັບແນວຄິດຂອງມະນຸດ; ເຮົາບໍ່ເຄີຍປະຕິບັດຕາມແນວຄິດຂອງມະນຸດ ແລະ ບໍ່ເຄີຍອະນຸຍາດໃຫ້ແນວຄິດຂອງເຂົາສອດຄ່ອງກັບເຮົາ. ເວລາທີ່ເຮົາປະຕິບັດແມ່ນເວລາທີ່ມະນຸດຖືກເປີດເຜີຍຢ່າງແນ່ນອນ. ເວົ້າອີກຢ່າງໜຶ່ງກໍຄື ແນວຄິດຂອງມະນຸດບໍ່ສາມາດປະເມີນການກະທຳຂອງເຮົາໄດ້. ນັບຕັ້ງແຕ່ເວລາແຫ່ງການຊົງສ້າງຈົນຮອດປັດຈຸບັນ, ບໍ່ມີຜູ້ໃດເຄີຍຄົ້ນພົບ "ທະວີບໃໝ່" ໃນສິ່ງຕ່າງໆທີ່ເຮົາເຮັດ; ບໍ່ມີຜູ້ໃດເຄີຍເຂົ້າໃຈກົດເກນທີ່ເຮົາປະຕິບັດຕາມ ແລະ ບໍ່ມີຜູ້ໃດເຄີຍເປີດທາງໃໝ່. ສະນັ້ນ, ຜູ້ຄົນໃນປັດຈຸບັນຈຶ່ງຍັງບໍ່ສາມາດເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໄດ້. ນີ້ແມ່ນສິ່ງທີ່ພວກເຂົາຂາດຢ່າງແນ່ນອນ ແລະ ນີ້ແມ່ນສິ່ງທີ່ພວກເຂົາຄວນເຂົ້າສູ່. ນັບຕັ້ງແຕ່ເວລາແຫ່ງການຊົງສ້າງຈົນຮອດປັດຈຸບັນ, ເຮົາບໍ່ເຄີຍດຳເນີນກິດຈະການດັ່ງກ່າວມາກ່ອນ. ເຮົາພຽງແຕ່ເພີ່ມພາກສ່ວນໃໝ່ເຂົ້າໃນພາລະກິດຂອງເຮົາໃນຍຸກສຸດທ້າຍ.

ແຕ່ເຖິງແມ່ນຢູ່ພາຍໃຕ້ສະຖານະການທີ່ແນ່ນອນດັ່ງກ່າວ, ຜູ້ຄົນກໍຍັງບໍ່ສາມາດເຂົ້າໃຈຄວາມປະສົງຂອງເຮົາ. ນີ້ບໍ່ແມ່ນສິ່ງທີ່ເຂົາຂາດຢ່າງແທ້ຈິງບໍ?

ຫຼັງຈາກເຮົາເຂົ້າສູ່ພາລະກິດໃໝ່, ເຮົາກໍມີຄວາມຕ້ອງການໃໝ່ສຳລັບມະນຸດ. ສຳລັບມະນຸດແລ້ວ, ມັນເປັນຄືກັບວ່າ ຄວາມຕ້ອງການໃນອະດີດແມ່ນບໍ່ມີຜົນຫຍັງ ເຊິ່ງຍ້ອນເຫດນັ້ນເຂົາຈຶ່ງລືມສິ່ງເຫຼົ່ານັ້ນ. ວິທີການໃໝ່ໃນການປະຕິບັດພາລະກິດຂອງເຮົາແມ່ນຫຍັງ? ເຮົາຂໍຫຍັງຈາກມະນຸດ? ຜູ້ຄົນເອງບໍ່ສາມາດປະເມີນວ່າ ສິ່ງທີ່ພວກເຂົາເຮັດໃນອະດີດແມ່ນເປັນໄປຕາມຄວາມປະສົງຂອງເຮົາ ຫຼື ບໍ່ ແລະ ການປະຕິບັດຂອງພວກເຂົາແມ່ນຢູ່ພາຍໃນຂອບເຂດທີ່ເຮົາຂໍ ຫຼື ບໍ່. ບໍ່ຈຳເປັນທີ່ເຮົາຈະຕ້ອງກວດສອບທຸກຢ່າງເທື່ອລະອັນ; ພວກເຂົາມີຄວາມເຂົ້າໃຈກ່ຽວກັບວຸດທິພາວະຂອງພວກເຂົາເອງ ແລະ ດ້ວຍເຫດນັ້ນ ໃນຈິດໃຈຂອງພວກເຂົາ ພວກເຂົາແມ່ນມີຄວາມຊັດເຈນວ່າ ພວກເຂົາສາມາດປະຕິບັດໄດ້ໄກພຽງໃດ ແລະ ບໍ່ຈຳເປັນທີ່ເຮົາຈະຕ້ອງບອກພວກເຂົາຢ່າງຊັດເຈນ. ບາງເທື່ອ ເມື່ອເຮົາກ່າວ ບາງຄົນຈະສະດຸດ; ສະນັ້ນ, ເຮົາຈຶ່ງໄດ້ຫຼີກເວັ້ນການກ່າວສ່ວນນີ້ຂອງພຣະທຳຂອງເຮົາ ເພື່ອປ້ອງກັນບໍ່ໃຫ້ຜູ້ຄົນອ່ອນແອຍ້ອນສິ່ງດັ່ງກ່າວ. ນີ້ບໍ່ມີປະໂຫຍດຫຼາຍກວ່າບໍ ໃນການສະແຫວງຫາຂອງມະນຸດ? ມັນບໍ່ມີປະໂຫຍດຫຼາຍກວ່າບໍ ໃນຄວາມກ້າວໜ້າຂອງມະນຸດ? ຜູ້ໃດບໍ່ປາຖະໜາທີ່ຈະລືມອະດີດຂອງພວກເຂົາ ແລະ ພະຍາຍາມກ້າວໄປທາງໜ້າແດ່? ຍ້ອນ “ຄວາມມັກງ່າຍ” ຂອງເຮົາ, ເຮົາຈຶ່ງບໍ່ຮູ້ວ່າຜູ້ຄົນເຂົ້າໃຈວ່າ ວິທີການໃນການກ່າວຂອງເຮົາໄດ້ເຂົ້າສູ່ໂລກໃໝ່ແລ້ວ ຫຼື ບໍ່. ນອກຈາກນັ້ນ, ຍ້ອນເຮົາ “ຫຍຸ້ງ” ກັບພາລະກິດຂອງເຮົາຫຼາຍ ເຮົາຈຶ່ງບໍ່ມີເວລາສອບຖາມວ່າ ຜູ້ຄົນເຂົ້າໃຈນ້ຳສຽງໃນການກ່າວຂອງເຮົາ ຫຼື ບໍ່. ສະນັ້ນ, ເຮົາຈຶ່ງຂໍໃຫ້ຜູ້ຄົນມີຄວາມເຂົ້າໃຈເຮົາໃຫ້ຫຼາຍຂຶ້ນເທົ່ານັ້ນ. ຍ້ອນເຮົາ “ຫຍຸ້ງ” ກັບພາລະກິດຂອງເຮົາຫຼາຍ ເຮົາຈຶ່ງບໍ່ສາມາດຢ້ຽມຢາມຖານຂອງພາລະກິດຂອງເຮົາດ້ວຍຕົວເອງ ເພື່ອຊີ້ນຳຜູ້ຄົນ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງມີ “ຄວາມເຂົ້າໃຈເລັກນ້ອຍ” ກ່ຽວກັບພວກເຂົາ. ຢ່າງໃດກໍຕາມ, ສະຫຼຸບກໍຄື ເຮົາໄດ້ເລີ່ມນຳພາມະນຸດໃຫ້ເຂົ້າສູ່ການເລີ່ມຕົ້ນໃໝ່ ແລະ ເຂົ້າສູ່ວິທີການໃໝ່ຢ່າງເປັນທາງການ. ໃນການກ່າວພຣະທຳທັງໝົດຂອງເຮົາ, ຜູ້ຄົນໄດ້ເຫັນວ່າ ມີຄວາມເປັນຕາຫົວ, ຕະຫຼົກ ແລະ ໂດຍສະເພາະແລ້ວ ແມ່ນມີນ້ຳສຽງຂອງການເຍາະເຍີ້ຍຢ່າງໜັກໃນສິ່ງທີ່ເຮົາກ່າວ. ສະນັ້ນ, ຄວາມປອງດອງລະຫວ່າງເຮົາ ແລະ ມະນຸດກໍຖືກລົບກວນໂດຍບໍ່ຮູ້ຕົວ ເຊິ່ງເຮັດໃຫ້ມີກ້ອນເມກປົກໜາມາປິດບັງໜ້າຂອງຜູ້ຄົນ. ຢ່າງໃດກໍຕາມ, ເຮົາບໍ່ໄດ້ຖືກສິ່ງນີ້ຈຳກັດ ແຕ່ສືບຕໍ່ປະຕິບັດພາລະກິດຂອງເຮົາ ເນື່ອງຈາກວ່າ ທຸກສິ່ງທີ່ເຮົາກ່າວ ແລະ ປະຕິບັດແມ່ນເປັນສ່ວນທີ່ຈຳເປັນໃນແຜນການຂອງເຮົາ; ທຸກສິ່ງທີ່ຖືກກ່າວຈາກປາກຂອງເຮົາແມ່ນເພື່ອຊ່ວຍມະນຸດ ແລະ ບໍ່ມີສິ່ງໃດທີ່ເຮົາປະຕິບັດຄືສິ່ງທີ່ບໍ່ສຳຄັນ; ທຸກສິ່ງທີ່ເຮົາປະຕິບັດແມ່ນເປັນການສິດສອນທຸກຄົນ. ມັນເປັນຍ້ອນວ່າ ມະນຸດຂາດເຂີນຈົນເຮົາຕ້ອງປ່ອຍລະບາຍອອກມາ ແລະ ສືບຕໍ່ກ່າວ. ບາງເທື່ອ ບາງຄົນກຳລັງລໍຖ້າຢ່າງໝົດຫວັງ ເພື່ອໃຫ້ເຮົາສ້າງຄວາມຕ້ອງການໃໝ່ສຳລັບພວກເຂົາ. ຖ້າເປັນເຊັ່ນນັ້ນ ເຮົາກໍໄດ້ຕອບສະໜອງຄວາມຕ້ອງການຂອງພວກເຂົາແລ້ວ. ແຕ່ມີສິ່ງໜຶ່ງທີ່ເຮົາຕ້ອງເຕືອນພວກເຈົ້າ: ເມື່ອເຮົາກ່າວ, ເຮົາຫວັງວ່າຜູ້ຄົນຈະມີການຢັ່ງຮູ້ຫຼາຍຂຶ້ນ. ເຮົາຫວັງວ່າ ພວກເຂົາຈະມີຄວາມຮູ້ແຈ້ງຫຼາຍຂຶ້ນ ເພື່ອວ່າພວກເຂົາຈະ

ສາມາດໄດ້ຮັບຈາກພຣະທຳຂອງເຮົາຫຼາຍຂຶ້ນ ແລະ ດ້ວຍເຫດນັ້ນ ກໍປະຕິບັດຕາມຄວາມຕ້ອງການຂອງເຮົາ. ກ່ອນໜ້ານັ້ນ ໃນຄຣິສຕະຈັກ ຄວາມສິນໃຈຂອງຜູ້ຄົນແມ່ນການຖືກຈັດການ ແລະ ການຖືກເຮັດໃຫ້ແຕກຫັກ. ການກິນ ແລະ ການດື່ມພຣະທຳຂອງເຮົາແມ່ນຖືກປະຕິບັດບົນພື້ນຖານຂອງຄວາມເຂົ້າໃຈເປົ້າໝາຍ ແລະ ແຫຼ່ງທີ່ມາຂອງພຣະທຳເຫຼົ່ານັ້ນ. ແຕ່ປັດຈຸບັນບໍ່ຄືກັນກັບອະດີດ ແລະ ຜູ້ຄົນບໍ່ສາມາດເຂົ້າສູ່ແຫຼ່ງທີ່ມາຂອງພຣະທຳຂອງເຮົາຢ່າງແທ້ຈິງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ມີໂອກາດໃນການຖືກເຮົາຈັດການ ແລະ ເຮັດໃຫ້ແຕກຫັກ ເນື່ອງຈາກວ່າພວກເຂົາໄດ້ໃຊ້ພະລັງທັງໝົດຂອງພວກເຂົາໃນການກິນ ແລະ ດື່ມພຣະທຳຂອງເຮົາເທົ່ານັ້ນ. ແມ່ນແຕ່ພາຍໃຕ້ສະຖານະການເຫຼົ່ານີ້ ພວກເຂົາກໍຍັງບໍ່ສາມາດຕອບສະໜອງຄວາມຮຽກຮ້ອງຂອງເຮົາໄດ້ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງສ້າງຄວາມຮຽກຮ້ອງໃໝ່ສຳລັບພວກເຂົາ: ເຮົາຂໍໃຫ້ພວກເຂົາເຂົ້າສູ່ການທົດລອງພ້ອມກັນກັບເຮົາ ແລະ ໃຫ້ພວກເຂົາເຂົ້າສູ່ການຂ້ຽນຕີ. ແຕ່ເຮົາຂໍເຕືອນພວກເຈົ້າກ່ຽວກັບສິ່ງໜຶ່ງ: ນີ້ບໍ່ແມ່ນການເຮັດໃຫ້ມະນຸດຕາຍ ແຕ່ກົງກັນຂ້າມ ນີ້ແມ່ນສິ່ງທີ່ພາລະກິດຂອງເຮົາຕ້ອງການ ເນື່ອງຈາກວ່າ ໃນຂັ້ນຕອນປັດຈຸບັນ ພຣະທຳຂອງເຮົາແມ່ນເປັນສິ່ງທີ່ມະນຸດບໍ່ສາມາດເຂົ້າໃຈໄດ້ ແລະ ມະນຸດບໍ່ສາມາດຮ່ວມມືກັບເຮົາໄດ້. ບໍ່ມີຫຍັງຕ້ອງເຮັດ! ເຮົາສາມາດເຮັດໃຫ້ມະນຸດເຂົ້າສູ່ວິທີການໃໝ່ພ້ອມກັບເຮົາໄດ້. ມີຫຍັງແດ່ທີ່ຈະຕ້ອງເຮັດອີກ? ຍ້ອນການຂາດເຂີນຂອງມະນຸດ, ເຮົາຈຶ່ງຕ້ອງເຂົ້າສູ່ກະແສທີ່ມະນຸດເຂົ້າສູ່ເຊັ່ນກັນ. ເຮົາບໍ່ແມ່ນຜູ້ທີ່ຈະເຮັດໃຫ້ມະນຸດສົມບູນບໍ? ເຮົາບໍ່ແມ່ນຜູ້ທີ່ຄິດແຜນນີ້ຂຶ້ນມາບໍ? ເຖິງແມ່ນວ່າຄວາມຕ້ອງການອື່ນຈະບໍ່ຍາກ ແຕ່ມັນກໍບໍ່ໄດ້ເປັນຮອງຄວາມຕ້ອງການທຳອິດ. ພາລະກິດຂອງເຮົາໃນທ່າມກາງກຸ່ມຄົນຂອງຍຸກສຸດທ້າຍແມ່ນກິດຈະການທີ່ບໍ່ເຄີຍມີມາກ່ອນ ແລະ ດ້ວຍເຫດນັ້ນ ທຸກຄົນຕ້ອງທົນທຸກກັບຄວາມລຳບາກສຸດທ້າຍເພື່ອເຮົາ ເພື່ອວ່າສະຫງ່າລາສີຂອງເຮົາຈະເຕີມເຕັມຈັກກະວານ. ພວກເຈົ້າເຂົ້າໃຈຄວາມປະສົງຂອງເຮົາບໍ? ນີ້ແມ່ນຄວາມຕ້ອງການສຸດທ້າຍທີ່ເຮົາຂໍຈາກມະນຸດ ເຊິ່ງເວົ້າໄດ້ວ່າ ເຮົາຫວັງວ່າທຸກຄົນຈະສາມາດເປັນພະຍານທີ່ເຂັ້ມແຂງ ແລະ ກຶກກ້ອງໃຫ້ກັບເຮົາຢູ່ຕໍ່ໜ້າມັງກອນແດງທີ່ຍິ່ງໃຫຍ່, ພວກເຂົາສາມາດຖວາຍຕົວເອງໃຫ້ກັບເຮົາເປັນຄັ້ງສຸດທ້າຍ ແລະ ປະຕິບັດຕາມຄວາມຕ້ອງການຂອງເຮົາເປັນເທື່ອສຸດທ້າຍ. ພວກເຈົ້າສາມາດເຮັດສິ່ງນີ້ໄດ້ແທ້ບໍ? ພວກເຈົ້າບໍ່ສາມາດເຮັດໃຫ້ຫົວໃຈຂອງເຮົາພໍໃຈໃນອະດີດ. ພວກເຈົ້າຈະສາມາດທຳລາຍແບບແຜນນີ້ໃນເວລາສຸດທ້າຍໄດ້ບໍ? ເຮົາໃຫ້ໂອກາດຜູ້ຄົນໄຕ່ຕອງ; ເຮົາໃຫ້ພວກເຂົາພິຈາລະນາຢ່າງລະອຽດກ່ອນທີ່ຈະໃຫ້ຄຳຕອບແກ່ເຮົາ. ມັນຜິດບໍທີ່ຈະເຮັດສິ່ງນີ້? ເຮົາລໍຖ້າຄຳຕອບຂອງມະນຸດ, ເຮົາລໍຖ້າ "ໜັງສືຕອບກັບ". ພວກເຈົ້າມີຄວາມເຊື່ອໃນການປະຕິບັດຕາມຄວາມຕ້ອງການຂອງເຮົາບໍ?

ວັນທີ 20 ເມສາ 1992

# ບົດທີ 35

ເຮົາໄດ້ເລີ່ມປະຕິບັດພາລະກິດຂອງເຮົາໃນທ່າມກາງມະນຸດ ໂດຍອະນຸຍາດໃຫ້ຜູ້ຄົນດຳລົງຊີວິດໃນກະແສດຽວກັນຄືກັບເຮົາ. ເມື່ອເຮົາປະຕິບັດພາລະກິດຂອງເຮົາສຳເລັດ, ເຮົາຍັງຈະຢູ່ໃນທ່າມກາງມະນຸດ ເນື່ອງຈາກພວກເຂົາແມ່ນສິ່ງທີ່ຖືກຄຸ້ມຄອງຕະຫຼອດແຜນການຄຸ້ມຄອງທັງໝົດຂອງເຮົາ ແລະ ມັນແມ່ນຄວາມປາຖະໜາຂອງເຮົາທີ່ຢາກໃຫ້ພວກເຂົາກາຍເປັນເຈົ້ານາຍໃນທຸກສິ່ງ. ຍ້ອນເຫດຜົນນີ້ເຮົາຈຶ່ງສືບຕໍ່ຍ່າງໃນທ່າມກາງມະນຸດຊາດ. ໃນຂະນະທີ່ມະນຸດຊາດ ແລະ ເຮົາເຂົ້າສູ່ຍຸກປັດຈຸບັນ ເຮົາກໍຮູ້ສຶກສະບາຍ ຍ້ອນຄວາມໄວຂອງພາລະກິດຂອງເຮົາໄດ້ໄວຂຶ້ນ. ມະນຸດຈະສາມາດນຳທັນໄດ້ແນວໃດ? ເຮົາໄດ້ປະຕິບັດພາລະກິດກັບຜູ້ຄົນທີ່ມຶນຊາ ແລະ ໂງ່ຈ້າ ແຕ່ເຖິງຢາງນັ້ນ ພວກເຂົາກໍບໍ່ໄດ້ຮັບຫຍັງຍ້ອນພວກເຂົາບໍ່ຖະໜອມເຮົາ. ເຮົາອາໄສຢູ່ໃນທ່າມກາງທຸກຄົນ ແລະ ສັງເກດເບິ່ງທຸກການເຄື່ອນໄຫວຂອງພວກເຂົາ ບໍ່ວ່າພວກເຂົາຈະຢູ່ບ່ອນໃດກໍຕາມ ທັງເທິງພື້ນດິນ ແລະ ໃຕ້ດິນ. ທຸກຄົນທີ່ຖືກຈັດປະເພດເປັນ "ມະນຸດ" ແມ່ນຕໍ່ຕ້ານເຮົາ ຄືກັບວ່າ "ການຕໍ່ຕ້ານເຮົາ" ແມ່ນວຽກຂອງມະນຸດ, ຄືກັບວ່າການເຮັດວຽກນີ້ຈະເຮັດໃຫ້ພວກເຂົາເປັນຄົນກຳພ້າພະເນຈອນ ທີ່ບໍ່ມີຜູ້ໃດເອົາໄປລ້ຽງ. ຢ່າງໃດກໍຕາມ, ເຮົາບໍ່ໄດ້ຕັດສິນພວກເຂົາຕາມອຳເພີໃຈບົນພື້ນຖານຂອງການກະທຳ ແລະ ການປະພຶດຂອງພວກເຂົາ. ກົງກັນຂ້າມ, ເຮົາສະໜັບສະໜູນ ແລະ ສະໜອງໃຫ້ພວກເຂົາຕາມວຸດທິພາວະຂອງພວກເຂົາ. ຍ້ອນມະນຸດແມ່ນຕົວລະຄອນຫຼັກຂອງແຜນການຄຸ້ມຄອງທັງໝົດຂອງເຮົາ, ເຮົາຈຶ່ງມອບການຊີ້ນຳຫຼາຍຂຶ້ນໃຫ້ແກ່ຜູ້ທີ່ຖືກກຳນົດໃຫ້ມີບົດບາດເປັນ "ມະນຸດ" ເພື່ອວ່າພວກເຂົາຈະສາມາດຫຼິ້ນບົດບາດນັ້ນຢ່າງຈິງໃຈ ແລະ ຢ່າງສຸດຄວາມສາມາດຂອງພວກເຂົາ ແລະ ເພື່ອວ່າລະຄອນນີ້ທີ່ເຮົາກຳລັງກຳກັບຈະປະສົບຜົນສຳເລັດຢ່າງໜ້າຕື່ນເຕັ້ນ. ນີ້ແມ່ນການຮ້ອງຂໍຂອງເຮົາທີ່ມີຕໍ່ມະນຸດ. ຖ້າເຮົາບໍ່ອະທິຖານເພື່ອມະນຸດ ແລ້ວພວກເຂົາຈະບໍ່ສາມາດຫຼິ້ນບົດບາດຂອງພວກເຂົາບໍ? ແລ້ວມັນກໍຈະເປັນກໍລະນີທີ່ວ່າ ເຮົາສາມາດບັນລຸສິ່ງທີ່ຜູ້ຄົນຂໍຈາກເຮົາ ແຕ່ພວກເຂົາບໍ່ສາມາດບັນລຸສິ່ງທີ່ເຮົາຂໍຈາກພວກເຂົາບໍ? ສາມາດເວົ້າໄດ້ວ່າ ເຮົາບໍ່ໄດ້ໃຊ້ອຳນາດຂອງເຮົາເພື່ອກົດຂີ່ມະນຸດ. ກົງກັນຂ້າມ, ນີ້ແມ່ນຄຳຮ້ອງຂໍສຸດທ້າຍຂອງເຮົາ ທີ່ເຮົາຂໍຈາກພວກເຂົາດ້ວຍຄວາມຕັ້ງໃຈ ແລະ ຄວາມຈິງໃຈທັງໝົດ. ພວກເຂົາບໍ່ສາມາດເຮັດສິ່ງທີ່ເຮົາຂໍໄດ້ແທ້ບໍ? ເຮົາໄດ້ປະທານໃຫ້ຜູ້ຄົນເປັນເວລາຫຼາຍປີ ແຕ່ກໍບໍ່ໄດ້ຮັບຫຍັງເປັນການຕອບແທນ. ມີຜູ້ໃດແດ່ທີ່ເຄີຍມອບສິ່ງໃດໜຶ່ງໃຫ້ແກ່ເຮົາ? ເລືອດ, ເຫື່ອແຮງ ແລະ ນໍ້າຕາຂອງເຮົາເປັນຄືໝອກເທິງພູເຂົາບໍ? ເຮົາໄດ້ "ສັກຢາວັກຊີນ" ຜູ້ຄົນຫຼາຍຄັ້ງ ແລະ ໄດ້ບອກພວກເຂົາວ່າ ຄວາມຕ້ອງການຂອງເຮົາສຳລັບພວກເຂົາບໍ່ແມ່ນການຮຽກຮ້ອງຄວາມເອົາໃຈໃສ່. ແລ້ວເປັນຫຍັງຜູ້ຄົນຈຶ່ງຫຼີກເວັ້ນເຮົາຕະຫຼອດ? ເປັນຍ້ອນເຮົາຈະປະຕິບັດຕໍ່ພວກເຂົາຄືລູກໄກ່ ທີ່ຈະຖືກຂ້າທັນທີທີ່ພວກມັນຖືກຈັບບໍ? ເຮົາໂຫດຮ້າຍ ແລະ ຂາດຄວາມເມດຕາແທ້ບໍ? ມະນຸດປະເມີນເຮົາດ້ວຍແນວຄິດຂອງພວກເຂົາເອງສະເໝີ. ໃນຂະນະທີ່ເຮົາຢູ່ໃນແນວຄິດຂອງພວກເຂົາ, ເຮົາຍັງຄືເກົ່າກັບຕອນທີ່ເຮົາຢູ່ສະຫວັນບໍ? ເຮົາບໍ່ຖືເອົາແນວຄິດຂອງຜູ້ຄົນເປັນວັດຖຸສຳລັບຄວາມສຸກຂອງເຮົາ.

ກົງກັນຂ້າມ, ເຮົາເຫັນຫົວໃຈຂອງພວກເຂົາເປັນສິ່ງທີ່ຕ້ອງຊື່ນຊົມ. ຢ່າງໃດກໍຕາມ, ເຮົາຮູ້ສຶກຂ້ອນຂ້າງໃຈຮ້າຍໜ້ອຍໜຶ່ງກັບສາມັນສຳນຶກຂອງພວກເຂົາ ຍ້ອນວ່າ ອີງຕາມພວກເຂົາແລ້ວ ເຮົາເອງແມ່ນບໍ່ມີສາມັນສຳນຶກເລີຍ. ສະນັ້ນ, ເຮົາຈຶ່ງມີຄວາມເຫັນຫຼາຍຂຶ້ນກ່ຽວກັບສາມັນສຳນຶກຂອງພວກເຂົາ. ຢ່າງໃດກໍຕາມ ເຮົາປະຕິເສດທີ່ຈະວິຈານສາມັນສຳນຶກຂອງພວກເຂົາໂດຍກົງ; ກົງກັນຂ້າມ, ເຮົາສືບຕໍ່ນຳພາພວກເຂົາຢ່າງອົດທົນ ແລະ ເປັນລະບົບ. ບໍ່ວ່າຢ່າງໃດກໍຕາມ, ມະນຸດແມ່ນອ່ອນແອ ແລະ ບໍ່ສາມາດເຮັດພາລະກິດໃດໄດ້ເລີຍ.

ໃນປັດຈຸບັນ, ເຮົາໄດ້ກ້າວເຂົ້າໄປໃນໂລກແຫ່ງການຂ້ຽນຕີທີ່ບໍ່ມີຂອບເຂດຢ່າງເປັນທາງການແລ້ວເຊິ່ງເຮົາມີຄວາມສຸກຢູ່ຄຽງຂ້າງມະນຸດຊາດ. ດ້ວຍມືຂອງເຮົາ, ເຮົາຍັງຈະອອກຄຳສັ່ງ ແລະ ພາຍໃຕ້ຄຳສັ່ງຂອງເຮົາ ມະນຸດຈະປະພຶດຕົນດີ; ຈະບໍ່ມີຜູ້ໃດກ້າຕໍ່ຕ້ານເຮົາ. ທຸກຢ່າງແມ່ນຢູ່ພາຍໃຕ້ການນຳພາຂອງເຮົາ ໂດຍປະຕິບັດພາລະກິດທີ່ເຮົາໄດ້ມອບໝາຍໃຫ້ ເນື່ອງຈາກນີ້ແມ່ນ “ວຽກງານ” ຂອງພວກເຂົາ. ໃນທ່າມກາງທຸກສິ່ງໃນສະຫວັນ ແລະ ພາຍໃຕ້ສະຫວັນ, ມີຜູ້ໃດກ້າທີ່ຈະບໍ່ອ່ອນນ້ອມຕໍ່ແຜນການຂອງເຮົາແດ່? ມີຜູ້ໃດທີ່ບໍ່ໄດ້ຢູ່ໃນກຳມືຂອງເຮົາແດ່? ມີຜູ້ໃດທີ່ບໍ່ກ່າວຄຳຍົກຍ້ອງ ແລະ ສັນລະເສີນພຣະທຳຂອງເຮົາ ແລະ ພາລະກິດຂອງເຮົາແດ່? ມະນຸດເຊີດຊູການກະທຳ ແລະ ການປະຕິບັດຂອງເຮົາ ແລະ ຍ້ອນທຸກການເຄື່ອນໄຫວຂອງເຮົາ ພວກເຂົາຈຶ່ງເອົາຕົວເອງເຂົ້າສູ່ກະແສຂອງພາລະກິດຂອງເຮົາ. ມີຜູ້ໃດສາມາດເຮັດໃຫ້ຕົວເອງຫຼຸດພົ້ນໄດ້ແດ່? ມີຜູ້ໃດສາມາດໜີຈາກພາລະກິດທີ່ເຮົາໄດ້ຈັດກຽມໄວ້ແດ່? ໂດຍບົດບັນຍັດແຫ່ງການບໍລິຫານຂອງເຮົາ, ມະນຸດແມ່ນຖືກບັງຄັບໃຫ້ຢູ່; ຖ້າບໍ່ມີສິ່ງນີ້ ພວກເຂົາທຸກຄົນກໍຈະລັກໜີຈາກ “ແຖວໜ້າ” ແລະ ກາຍເປັນ “ຜູ້ໂຕນໜີ”. ມີຜູ້ໃດທີ່ບໍ່ຢ້ານຄວາມຕາຍແດ່? ຜູ້ຄົນສາມາດເຮັດໃຫ້ຊີວິດຂອງຕົວເອງຕົກຢູ່ໃນອັນຕະລາຍແທ້ບໍ່? ເຮົາບໍ່ໄດ້ບັງຄັບຜູ້ໃດ ຍ້ອນເຮົາໄດ້ຮັບຄວາມເຂົ້າໃຈທີ່ທົ່ວເຖິງກ່ຽວກັບທຳມະຊາດຂອງມະນຸດແຕ່ດົນນານແລ້ວ. ສະນັ້ນ, ເຮົາຈຶ່ງໄດ້ປະຕິບັດໂຄງການທີ່ຜູ້ຄົນບໍ່ເຄີຍເຮັດມາກ່ອນຕະຫຼອດ. ຍ້ອນບໍ່ມີຜູ້ໃດສາມາດປະຕິບັດພາລະກິດຂອງເຮົາ, ເຮົາຈຶ່ງໄດ້ເອົາຕົນຢຽບສະໜາມຮົບດ້ວຍຕົວເອງ ເພື່ອຮ່ວມໃນການຕໍ່ສູ້ແຫ່ງຊີວິດ ແລະ ຄວາມຕາຍກັບຊາຕານ. ທຸກມື້ນີ້ ຊາຕານແມ່ນອາລະວາດຢ່າງຮຸນແຮງຫຼາຍ. ເປັນຫຍັງເຮົາຈຶ່ງບໍ່ໃຊ້ໂອກາດນີ້ເພື່ອສະແດງຈຸດສຸມຂອງພາລະກິດຂອງເຮົາ ແລະ ເປີດເຜີຍອຳນາດຂອງເຮົາ? ດັ່ງທີ່ເຮົາໄດ້ກ່າວກ່ອນໜ້ານັ້ນ, ເຮົາໃຊ້ອຸບາຍຂອງຊາຕານເປັນຕົວປະກອບຂອງເຮົາ; ນີ້ບໍ່ແມ່ນໂອກາດທີ່ດີທີ່ສຸດບໍ? ພຽງຕອນນີ້ ເຮົາຈຶ່ງໄດ້ເປີດເຜີຍຮອຍຍິ້ມຢ່າງພູມໃຈ ເນື່ອງຈາກເຮົາໄດ້ບັນລຸເປົ້າໝາຍຂອງເຮົາແລ້ວ. ເຮົາຈະບໍ່ແລ່ນໄປມາ ແລະ ຂໍ “ຄວາມຊ່ວຍເຫຼືອ” ຈາກມະນຸດອີກຕໍ່ໄປ. ເຮົາໄດ້ຢຸດອີກກະທືກຄຶກໂຄມ ແລະ ບໍ່ໄດ້ດຳລົງຊີວິດແບບຄົນພະເນຈອນອີກຕໍ່ໄປແລ້ວ. ນັບແຕ່ນີ້ເປັນຕົ້ນໄປ ເຮົາຈະດຳລົງຊີວິດໃນຄວາມສະຫງົບ. ໃນທຳນອງດຽວກັນນັ້ນ ມະນຸດກໍຈະປອດໄພ ແລະ ສະບາຍດີ ເນື່ອງຈາກມື້ຂອງເຮົາໄດ້ມາເຖິງ. ຢູ່ເທິງແຜ່ນດິນໂລກ ເຮົາໄດ້ໃຊ້ຊີວິດທີ່ວຸ້ນວາຍຂອງມະນຸດ ເຊິ່ງເປັນຊີວິດທີ່ເບິ່ງຄືວ່າຄວາມບໍ່ຍຸຕິທຳຫຼາຍຢ່າງໄດ້ເກີດຂຶ້ນ. ໃນສາຍຕາຂອງມະນຸດ, ເຮົາໄດ້ແບ່ງປັນຄວາມສຸກ ແລະ ຄວາມເສົ້າ ພ້ອມກັບຄວາມລຳບາກຍາກແຄ້ນຂອງພວກເຂົາ. ເຮົາໄດ້ດຳລົງ

ຊີວິດຢູ່ແຜ່ນດິນໂລກ ແລະ ພາຍໃຕ້ສະຫວັນຄືກັນກັບມະນຸດ. ສະນັ້ນ, ພວກເຂົາຈຶ່ງເຫັນເຮົາເປັນສິ່ງທີ່ຖືກສ້າງຕະຫຼອດ. ຍ້ອນມະນຸດບໍ່ເຄີຍເຫັນເຮົາຄືກັບຕອນທີ່ເຮົາຢູ່ສະຫວັນ ພວກເຂົາຈຶ່ງບໍ່ເຄີຍໃຊ້ຄວາມພະຍາຍາມຢ່າງສູງເພື່ອໃນນາມຂອງເຮົາ. ຢ່າງໃດກໍຕາມ, ຕາມສະຖານະການໃນປັດຈຸບັນ ຜູ້ຄົນແມ່ນບໍ່ມີທາງເລືອກ ນອກຈາກຍອມຮັບວ່າເຮົາແມ່ນຜູ້ຄວບຄຸມຊະຕາກຳຂອງພວກເຂົາ ແລະ ນັກເວົ້າທີ່ກ່າວຈາກກ້ອນເມກ. ສະນັ້ນ, ມະນຸດຈຶ່ງໄດ້ເອົາຫົວຂອງພວກເຂົາຂາບລົງພື້ນເພື່ອນະມັດສະການຢູ່ຕໍ່ໜ້າເຮົາ. ນີ້ບໍ່ແມ່ນຫຼັກຖານຂອງການກັບຄືນມາຢ່າງມີໄຊຊະນະຂອງເຮົາບໍ? ນີ້ບໍ່ແມ່ນການສະແດງເຖິງໄຊຊະນະຂອງເຮົາທີ່ມີເໜືອກອງກຳລັງສັດຕູທັງໝົດບໍ? ທຸກຄົນມີລາງສັງຫອນວ່າ ໂລກກຳລັງເຂົ້າສູ່ການສິ້ນສຸດ ແລະ ມະນຸດຈະຮັບການຊໍາລະລ້າງທີ່ຍິ່ງໃຫຍ່. ຢ່າງໃດກໍຕາມ, ໃນຄວາມຈິງແລ້ວພວກເຂົາບໍ່ສາມາດເຮັດສິ່ງທີ່ເຮົາຂໍຈາກພວກເຂົາຢ່າງມີສະຕິ, ສະນັ້ນ ພວກເຂົາຈຶ່ງບໍ່ມີທາງເລືອກນອກຈາກຮ້ອງໄຫ້ພາຍໃຕ້ການຂ້ຽນຕີຂອງເຮົາ. ສາມາດເຮັດຫຍັງໄດ້ແດ່? ຜູ້ໃດບອກມະນຸດບໍ່ໃຫ້ເຊື່ອຟັງ? ຜູ້ໃດບອກພວກເຂົາໃຫ້ເຂົ້າສູ່ຍຸກສຸດທ້າຍ? ເປັນຫຍັງພວກເຂົາຈຶ່ງເກີດໃນໂລກມະນຸດໃນຍຸກສຸດທ້າຍ? ທຸກສິ່ງແມ່ນຖືກເຮົາຈັດແຈງ ແລະ ວາງແຜນດ້ວຍຕົວເອງ. ຜູ້ໃດສາມາດຈົ່ມຕໍ່ວ່າໄດ້ແດ່?

ນັບແຕ່ການຊົງສ້າງໂລກ, ເຮົາຍ່າງໄປມາໃນທ່າມກາງມະນຸດຊາດ ໂດຍເປັນໝູ່ກັບພວກເຂົາໃນການໃຊ້ຊີວິດຢູ່ໃນໂລກຂອງພວກເຂົາ. ຢ່າງໃດກໍຕາມ, ໃນຮຸ່ນກ່ອນນັ້ນ ແມ່ນບໍ່ມີຄົນໃດເຄີຍຖືກເຮົາເລືອກ; ທຸກຄົນຖືກປະຕິເສດໂດຍໜັງສືທີ່ມີດງຽບຂອງເຮົາ. ນີ້ກໍຍ້ອນວ່າ ຜູ້ຄົນໃນອະດີດບໍ່ໄດ້ຮັບໃຊ້ເຮົາໂດຍສະເພາະ, ສະນັ້ນ ໃນການຕອບແທນ ເຮົາຈຶ່ງບໍ່ຮັກພວກເຂົາໂດຍສະເພາະ. ພວກເຂົາເອົາ “ຂອງຂວັນ” ຂອງຊາຕານ ແລະ ຫຼັງຈາກນັ້ນກໍຫັນໜ້າມາ ແລະ ຖວາຍສິ່ງເຫຼົ່ານັ້ນໃຫ້ເຮົາ. ນີ້ບໍ່ແມ່ນການກ່າວຮ້າຍເຮົາບໍ? ໃນຂະນະທີ່ພວກເຂົາກຳລັງຖວາຍ, ເຮົາບໍ່ໄດ້ເປີດເຜີຍຄວາມລັງກຽດຂອງເຮົາ; ກົງກັນຂ້າມ, ເຮົາໄດ້ປ່ຽນກົນອຸບາຍຂອງພວກເຂົາມາເປັນຜົນປະໂຫຍດຂອງເຮົາເອງໂດຍການເພີ່ມ “ຂອງຂວັນ” ເຫຼົ່ານີ້ໃສ່ວັດຖຸແຫ່ງການຄຸ້ມຄອງຂອງເຮົາ. ຫຼັງຈາກນັ້ນ, ເມື່ອພວກເຂົາໄດ້ຖືກເຄື່ອງຈັກແປຮູບ, ເຮົາກໍຈະເຜົາຂີ້ເຫຼັກທີ່ຢູ່ຂ້າງໃນ. ໃນຍຸກປັດຈຸບັນ, ມະນຸດບໍ່ໄດ້ຖວາຍ “ຂອງຂວັນ” ຫຼາຍໃຫ້ແກ່ເຮົາ ແຕ່ເຮົາກໍບໍ່ໄດ້ຕຳນິຕິເຕືອນພວກເຂົາຍ້ອນສິ່ງນີ້. ຜູ້ຄົນເຫຼົ່ານີ້ທຸກຍາກ ແລະ ມີເປົ່າຕະຫຼອດ; ສະນັ້ນ, ເມື່ອໄດ້ສັງເກດເຫັນສະຖານະການຕົວຈິງຂອງພວກເຂົາ, ເຮົາກໍບໍ່ເຄີຍເຮັດໃຫ້ພວກເຂົາຖືກຮຽກຮ້ອງຢ່າງບໍ່ມີເຫດຜົນໃດໆນັບແຕ່ເຮົາມາໂລກມະນຸດ. ກົງກັນຂ້າມ, ຫຼັງຈາກທີ່ໄດ້ມອບ “ວັດຖຸ” ໃຫ້ພວກເຂົາ, ເຮົາໄດ້ຊອກຫາ “ຜະລິດຕະພັນທີ່ສຳເລັດຮູບ” ທີ່ເຮົາຕ້ອງການ ເນື່ອງຈາກວ່ານີ້ແມ່ນຂອບເຂດທີ່ມະນຸດສາມາດບັນລຸໄດ້. ເຮົາໃຊ້ເວລາຫຼາຍປີໃນຄວາມລຳບາກ ໂດຍຮຽນຮູ້ເຖິງຄວາມໝາຍຂອງການດຳລົງຊີວິດໃນຖານະທີ່ເປັນມະນຸດກ່ອນເຮັດການຮຽກຮ້ອງທີ່ເໝາະສົມ. ຖ້າເຮົາບໍ່ປະສົບກັບຊີວິດມະນຸດ, ເຮົາຈະສາມາດເຂົ້າໃຈບັນຫາທີ່ຜູ້ຄົນພົບວ່າຍາກໃນການສົນທະນາໄດ້ແນວໃດ? ຢ່າງໃດກໍຕາມ, ມະນຸດບໍ່ເຫັນສິ່ງນີ້ເລີຍ; ພວກເຂົາເວົ້າວ່າ ເຮົາແມ່ນພຣະເຈົ້າທີ່ມີອຳນາດເໜືອທຸກສິ່ງ ແລະ ເໜືອທຳມະຊາດ. ນີ້ບໍ່ແມ່ນແນວຄິດທີ່ມະນຸດທຸກຄົນມີຕະຫຼອດປະຫວັດສາດ ທີ່

ພວກເຂົາມີຈິນຮອດປັດຈຸບັນນີ້ບໍ? ເຮົາກ່າວວ່າ ຢູ່ແຜ່ນດິນໂລກແມ່ນບໍ່ມີຜູ້ໃດສາມາດຮູ້ຈັກເຮົາໄດ້ຢ່າງແທ້ຈິງ ແລະ ຄົບຖ້ວນ. ຄຳເວົ້ານີ້ມີຄວາມໝາຍທີ່ແອບແຝງຂອງມັນ; ມັນບໍ່ແມ່ນຄຳເວົ້າທີ່ວ່າງເປົ່າເທົ່ານັ້ນ. ເຮົາໄດ້ປະສົບກັບມັນ ແລະ ສັງເກດເບິ່ງສິ່ງນີ້ດ້ວຍຕົວເຮົາເອງ, ສະນັ້ນ ເຮົາຈຶ່ງມີຄວາມເຂົ້າໃຈກ່ຽວກັບລາຍລະອຽດຕ່າງໆ. ຖ້າເຮົາບໍ່ໄດ້ລົງມາຍັງໂລກມະນຸດ, ຜູ້ໃດຈະມີໂອກາດຮູ້ຈັກເຮົາແດ່? ມີຜູ້ໃດສາມາດຟັງພຣະທຳຂອງເຮົາດ້ວຍຕົວເອງແດ່? ມີຜູ້ໃດສາມາດເຫັນຮູບຮ່າງຂອງເຮົາໃນທ່າມກາງພວກເຂົາແດ່? ຕະຫຼອດຍຸກຕ່າງໆ, ເຮົາໄດ້ລີ້ລັບໃນກ້ອນເມກຕະຫຼອດ. ໃນເບື້ອງຕົ້ນ ເຮົາໄດ້ທຳນາຍວ່າ: "ເຮົາຈະລົງມາຍັງໂລກມະນຸດໃນຍຸກສຸດທ້າຍເພື່ອເຮັດໜ້າທີ່ເປັນຕົວຢ່າງຂອງພວກເຂົາ". ນີ້ຄືເຫດຜົນທີ່ວ່າ ມີແຕ່ຜູ້ຄົນໃນປັດຈຸບັນເທົ່ານັ້ນ ທີ່ໂຊກດີໃນການສາມາດເຮັດໃຫ້ຂອບເຂດຂອງພວກເຂົາກວ້າງຂວາງຂຶ້ນ. ນີ້ບໍ່ແມ່ນຄວາມເມດຕາທີ່ເຮົາໄດ້ປະທານໃຫ້ແກ່ພວກເຂົາບໍ? ພວກເຂົາບໍ່ສາມາດເຂົ້າໃຈພຣະຄຸນຂອງເຮົາແທ້ໆເລີຍບໍ? ເປັນຫຍັງມະນຸດຈຶ່ງບໍ່ມີຄວາມຮູ້ສຶກ ແລະ ໂງ່ຈ້າແທ້? ພວກເຂົາໄດ້ມາໄກຂະໜາດນີ້; ເປັນຫຍັງພວກເຂົາຍັງບໍ່ຕື່ນເທື່ອ? ເຮົາໄດ້ຢູ່ໃນໂລກນີ້ເປັນເວລາຫຼາຍປີແລ້ວ ແຕ່ມີຜູ້ໃດທີ່ຮູ້ຈັກເຮົາແດ່? ບໍ່ແປກໃຈເລີຍທີ່ເຮົາຂ້ຽນຕີຜູ້ຄົນ. ມັນເບິ່ງຄືວ່າພວກເຂົາຄືເປົ້າໝາຍທີ່ເຮົາຈະໃຊ້ອຳນາດຂອງເຮົາ; ມັນເບິ່ງຄືວ່າພວກເຂົາແມ່ນລູກປືນຂອງເຮົາ ເຊິ່ງເມື່ອຖືກຍິງອອກໄປ ທຸກຄົນກໍຈະ "ໜີ" ໄປໝົດ. ຜູ້ຄົນຈິນຕະນາການເປັນເຊັ່ນນັ້ນ. ເຮົາເຄົາລົບມະນຸດສະເໝີ; ເຮົາບໍ່ເຄີຍຂູດຮີດພວກເຂົາຕາມອຳເພີໃຈ ຫຼື ຄ້າພວກເຂົາຄືກັບຂ້າທາດ. ນີ້ກໍຍ້ອນວ່າ ເຮົາບໍ່ສາມາດຈາກພວກເຂົາໄປໄດ້ ແລະ ພວກເຂົາກໍບໍ່ສາມາດຈາກເຮົາໄປໄດ້. ສະນັ້ນ, ຄວາມສຳພັນແຫ່ງຊີວິດ ແລະ ຄວາມຕາຍຈຶ່ງຖືກສ້າງຂຶ້ນລະຫວ່າງພວກເຮົາ. ເຮົາຖະໜອມມະນຸດຊາດສະເໝີ. ເຖິງແມ່ນວ່າມະນຸດຊາດບໍ່ເຄີຍຖະໜອມເຮົາ, ແຕ່ພວກເຂົາກໍແນມເບິ່ງເຮົາຕະຫຼອດ ເຊິ່ງເປັນເຫດຜົນທີ່ເຮົາສືບຕໍ່ໃຊ້ຄວາມພະຍາຍາມກັບພວກເຂົາ. ເຮົາຮັກຜູ້ຄົນຄືກັບຊັບສົມບັດຂອງເຮົາເອງ ຍ້ອນພວກເຂົາແມ່ນ "ທຶນ" ຂອງການຄຸ້ມຄອງຂອງເຮົາຢູ່ເທິງແຜ່ນດິນໂລກ; ດັ່ງນັ້ນ, ເຮົາຈະບໍ່ກຳຈັດພວກເຂົາຢ່າງແນ່ນອນ. ຄວາມປະສົງຂອງເຮົາທີ່ມີຕໍ່ມະນຸດຈະບໍ່ມີວັນປ່ຽນແປງ. ພວກເຂົາສາມາດເຊື່ອຄຳສາບານຂອງເຮົາໄດ້ຢ່າງແທ້ຈິງບໍ? ພວກເຂົາສາມາດເຮັດໃຫ້ເຮົາພໍໃຈເພື່ອປະໂຫຍດຂອງເຮົາໄດ້ແນວໃດ? ນີ້ແມ່ນໜ້າວຽກທີ່ເຮົາໄດ້ກຳນົດໃຫ້ມະນຸດຊາດທຸກຄົນ; ມັນແມ່ນ "ວຽກບ້ານ" ທີ່ເຮົາໄດ້ມອບໝາຍໃຫ້ພວກເຂົາ. ມັນແມ່ນຄວາມຫວັງຂອງເຮົາ ທີ່ພວກເຂົາທຸກຄົນຈະພະຍາຍາມຢ່າງໜັກເພື່ອເຮັດມັນໃຫ້ສຳເລັດ.

ວັນທີ 23 ເມສາ 1992

# ບົດທີ 36

ທຸກສິ່ງແມ່ນຖືກຈັດແຈງໂດຍມືຂອງເຮົາ. ຜູ້ໃດແດ່ທີ່ກ້າເຮັດຕາມໃຈຂອງພວກເຂົາ? ຜູ້ໃດແດ່ທີ່ສາມາດປ່ຽນແປງສິ່ງນັ້ນໄດ້ຢ່າງງ່າຍດາຍ? ຜູ້ຄົນລ່ອງລອຍຢູ່ໃນອາກາດ, ເຄື່ອນໄຫວໃນຄະນະທີ່ຂີ້ຝຸ່ນພັດປິວໄປມາ, ໜ້າຂອງພວກເຂົາເປິເປື້ອນ, ເຮັດໃຫ້ພວກເຂົາເປັນຕາລັງກຽດຕັ້ງແຕ່ຫົວຈົນຮອດໂປ້ຕີນ. ເຮົາຫຼຽວເບິ່ງຈາກທ່າມກາງກ້ອນເມກດ້ວຍຄວາມໜັກໃຈ: ເປັນຫຍັງມະນຸດທີ່ເຄີຍເຕັມໄປດ້ວຍຊີວິດຊີວາຈຶ່ງກາຍເປັນແບບນີ້? ແລ້ວເປັນຫຍັງເຂົາຈຶ່ງບໍ່ຮູ້ເຖິງສິ່ງນີ້ ແລະ ເສີຍເມີຍຕໍ່ສິ່ງນີ້? ເປັນຫຍັງເຂົາຈຶ່ງ "ລະເລີງກັບຕົນເອງ" ແລະ ຍອມໃຫ້ຕົນເອງຖືກປົກຄຸມດ້ວຍຄວາມສົກກະປົກ? ສິ່ງດັ່ງກ່າວຄືການຂາດຄວາມຮັກ ແລະ ການບໍ່ນັບຖືຕົນເອງ. ເປັນຫຍັງມະນຸດຈຶ່ງຫຼີກເວັ້ນສິ່ງທີ່ເຮົາຂໍຮ້ອງຢູ່ສະເໝີ? ເຮົາໂຫດຮ້າຍ ແລະ ໄຮ້ມະນຸດສະທຳຕໍ່ເຂົາແທ້ບໍ? ເຮົາເຮັດແບບພະເດັດການ ແລະ ບໍ່ມີເຫດຜົນແທ້ບໍ? ແລ້ວເປັນຫຍັງຜູ້ຄົນຈຶ່ງຫຼຽວເບິ່ງເຮົາດ້ວຍສາຍຕາແບບບໍ່ພໍໃຈຢູ່ສະເໝີ? ເປັນຫຍັງພວກເຂົາຈຶ່ງກຽດຊັງເຮົາຢູ່ຕະຫຼອດ? ເຮົາໄດ້ນຳພວກເຂົາໄປສູ່ທາງຕັນບໍ? ມະນຸດບໍ່ເຄີຍຄົ້ນພົບຫຍັງໃນການຂ້ຽນຕີຂອງເຮົາຈັກເທື່ອ, ຍ້ອນເຂົາບໍ່ໄດ້ເຮັດຫຍັງ ນອກຈາກຈັບແອກທີ່ຢູ່ອ້ອມຄໍຂອງພວກເຂົາດ້ວຍມືທັງສອງ, ຕາສອງໜ່ວຍຈ້ອງເບິ່ງເຮົາ ຄືກັບວ່າ ກຳລັງເບິ່ງສັດຕູ ແລະ ໃນຊ່ວງເວລານີ້ເອງ ທີ່ເຮົາຮູ້ສຶກວ່າພວກເຂົາຈ່ອຍເຫຼືອງຫຼາຍສ່ຳໃດ. ມັນເປັນຍ້ອນສິ່ງນີ້, ເຮົາຈຶ່ງເວົ້າວ່າບໍ່ມີຜູ້ໃດຍຶດໝັ້ນໃນທ່າມກາງການທົດລອງເລີຍ. ວຸດທິພາວະຂອງມະນຸດບໍ່ໄດ້ເປັນແບບນັ້ນແທ້ບໍ? ເຮົາຕ້ອງບອກຕົວເລກຈາກ "ການວັດແທກ" ຂອງເຂົາບໍ? "ຄວາມສູງ" ຂອງມະນຸດບໍ່ໄດ້ສູງເກີນໄປກວ່າໜອນນ້ອຍທີ່ກະດູກກະດິກຕາມພື້ນດິນ ແລະ "ເອິກ" ຂອງເຂົາກໍສ່ຳກັບຄວາມກວ້າງຂອງງູໂຕໜຶ່ງເທົ່ານັ້ນ. ໃນສິ່ງນີ້, ເຮົາບໍ່ໄດ້ດູຖູກມະນຸດ, ແຕ່ສິ່ງເຫຼົ່ານີ້ບໍ່ແມ່ນປະລິມານແທ້ຈິງຂອງວຸດທິພາວະຂອງເຂົາບໍ? ເຮົາເຮັດໃຫ້ມະນຸດເສື່ອມເສຍບໍ? ມະນຸດເປັນຄືກັບເດັກນ້ອຍທີ່ຫຼິ້ນຢ່າງມີຄວາມສຸກ. ບາງຄັ້ງເຂົາເຖິງກັບຫຼິ້ນກັບສັດ, ແຕ່ເຂົາກໍຍັງມີຄວາມສຸກ; ແລະ ເຂົາເປັນຄືກັບແມວທີ່ດຳລົງຊີວິດຢູ່ໂດຍບໍ່ກັງວົນ ຫຼື ເປັນຫ່ວງຫຍັງ. ບາງເທື່ອ ມັນເປັນຍ້ອນການເອນອຽງຂອງພຣະວິນຍານ ຫຼື ບົດບາດຂອງພຣະເຈົ້າທີ່ຢູ່ໃນສະຫວັນ, ເຮົາຈຶ່ງຮູ້ສຶກເບື່ອໜ່າຍຫຼາຍກັບວິຖີຊີວິດທີ່ສິ້ນເປືອງຂອງຜູ້ຄົນເທິງແຜ່ນດິນໂລກ. ຍ້ອນຊີວິດຂອງມະນຸດ ເຊິ່ງເປັນຄືກັບຊີວິດຂອງແມ່ພະຍາດໂຕໜຶ່ງ, "ຄວາມສົນໃຈ" ຂອງເຮົາໃນຄຳວ່າ "ຊີວິດຂອງມະນຸດ" ຈຶ່ງເພີ່ມຂຶ້ນໜ້ອຍໜຶ່ງ ແລະ ສະນັ້ນ ເຮົາຈຶ່ງ "ສະແດງຄວາມເຄົາລົບນັບຖື" ຫຼາຍຂຶ້ນໜ້ອຍໜຶ່ງຕໍ່ຊີວິດມະນຸດ. ຍ້ອນມັນເບິ່ງຄືກັບວ່າ ມີພຽງແຕ່ມະນຸດເທົ່ານັ້ນທີ່ສາມາດສ້າງຊີວິດທີ່ມີຄວາມໝາຍ ໃນຂະນະທີ່ເຮົາບໍ່ສາມາດເຮັດໃນສິ່ງນີ້ໄດ້. ສະນັ້ນ ເຮົາຈຶ່ງໄດ້ແຕ່ຖອຍໄປຢູ່ "ພູເຂົາ" ຍ້ອນເຮົາບໍ່ສາມາດຜະເຊີນ ແລະ ເຝົ້າເບິ່ງຄວາມລຳບາກໃນທ່າມກາງມະນຸດໄດ້. ເຖິງຢ່າງໃດກໍຕາມ ມະນຸດບັງຄັບເຮົາຢ່າງຮີບດ່ວນ ເຊິ່ງເຮົາບໍ່ມີທາງເລືອກ! ເຮົາສາມາດເຊື່ອຟັງການຈັດແຈງຂອງມະນຸດ, ສະຫຼຸບປະສົບການຮ່ວມກັບເຂົາ ແລະ ຜະເຊີນກັບຊີວິດຂອງມະນຸດຄຽງຄູ່ໄປກັບເຂົາ. ໃນສະຫວັນ ເຮົາທ່ອງທ່ຽວທົ່ວເມືອງອີກຄັ້ງ ແລະ ຢູ່ລຸ່ມສະຫວັນ ເຮົາໄດ້ທ່ອງທ່ຽວທົ່ວທຸກປະເທດອີກຄັ້ງ. ແຕ່ບໍ່ມີ

ຜູ້ໃດຄົ້ນພົບເຮົາເລີຍ, ພວກເຂົາພຽງແຕ່ໄດ້ຍິນສຽງຂອງການເຄື່ອນໄຫວໄປມາຂອງເຮົາ. ໃນສາຍຕາຂອງຜູ້ຄົນ, ເຮົາມາ ແລະ ໄປໂດຍບໍ່ມີຮ່ອງຮອຍ ຫຼື ເງົາ. ມັນເປັນຄືກັບວ່າ ເຮົາໄດ້ກາຍເປັນພະທຽມທີ່ບໍ່ສາມາດເບິ່ງເຫັນໄດ້ໃນຫົວໃຈຂອງພວກເຂົາ, ແຕ່ຜູ້ຄົນກໍບໍ່ເຊື່ອໃນສິ່ງນັ້ນ. ເປັນໄປໄດ້ບໍວ່າ ທຸກສິ່ງນີ້ບໍ່ແມ່ນຄວາມຈິງທີ່ຖືກສາລະພາບໂດຍປາກຂອງມະນຸດ? ໃນຈຸດນີ້, ຜູ້ໃດແດ່ບໍ່ຍອມຮັບວ່າພວກເຂົາຄວນຖືກຂ້ຽນຕີ? ຜູ້ຄົນຍັງສາມາດເງີຍຄໍຂອງພວກເຂົາຂຶ້ນສູງຕໍ່ໜ້າຫຼັກຖານທີ່ຊັດເຈນນີ້ຢູ່ບໍ?

ເຮົາກຳລັງເຮັດ "ຂໍ້ຕົກລົງທາງທຸລະກິດ" ທ່າມກາງມະນຸດ, ເຮົາຊຳລະລ້າງຄວາມບໍ່ບໍລິສຸດ ແລະຄວາມບໍ່ຊອບທຳທັງໝົດຂອງເຂົາ ແລະ ສະນັ້ນ "ດຳເນີນການ" ກັບເຂົາ ເພື່ອວ່າເຂົາຈະເປັນທີ່ພໍໃຈຂອງເຮົາເອງ. ແຕ່ການຮ່ວມມືຂອງມະນຸດກໍຂາດບໍ່ໄດ້ ໃນຂັ້ນຕອນນີ້ຂອງພາລະກິດ, ຍ້ອນເຂົາໂດດເຕັ້ນໄປມາຄືກັບປາທີ່ຫາກໍຖືກຈັບໄດ້. ສະນັ້ນເພື່ອປ້ອງກັນອຸປະຕິເຫດໃດໜຶ່ງ, ເຮົາຈຶ່ງຂ້າ "ປາ" ທຸກໂຕທີ່ຖືກຈັບໄດ້, ຫຼັງຈາກນັ້ນ ປາເຫຼົ່ານັ້ນກໍເຊື່ອຟັງ ແລະ ບໍ່ຕໍ່ວ່າແມ່ນແຕ່ໜ້ອຍດຽວ. ເມື່ອເຮົາຕ້ອງການມະນຸດ, ເຂົາກໍລີ້ຊ້ອນຢູ່ສະເໝີ. ມັນເປັນຄືກັບວ່າ ເຂົາບໍ່ເຄີຍໄດ້ເຫັນເຫດການທີ່ເປັນຕາງຶດ, ຄືກັບເຂົາເກີດຢູ່ບ້ານນອກ ແລະ ບໍ່ຮູ້ຫຍັງກ່ຽວກັບເລື່ອງໃນເມືອງ. ເຮົາເພີ່ມສະຕິປັນຍາຂອງເຮົາໃສ່ໃນສ່ວນຕ່າງໆ ຂອງມະນຸດທີ່ຂາດເຂີນຢູ່ ແລະ ເຮັດໃຫ້ເຂົາຮູ້ຈັກເຮົາ; ເພາະມະນຸດທຸກຍາກເກີນໄປ, ເຮົາຈຶ່ງມາທ່າມກາງມະນຸດເປັນການສ່ວນຕົວ ແລະ ມອບ "ເສັ້ນທາງສູ່ຄວາມຮັ່ງມີ" ໃຫ້ກັບເຂົາ, ເຮັດໃຫ້ເຂົາມືນຕາຂອງເຂົາ. ດ້ວຍສິ່ງນີ້, ເຮົາບໍ່ໄດ້ຊ່ວຍເຫຼືອເຂົາບໍ? ນີ້ບໍ່ແມ່ນຄວາມເຫັນອົກເຫັນໃຈທີ່ເຮົາມີສຳລັບມະນຸດບໍ? ນີ້ບໍ່ແມ່ນຄວາມຮັກທີ່ມອບ ໃຫ້ໂດຍບໍ່ມີເງື່ອນໄຂບໍ? ແລ້ວຄວາມກຽດຊັງເປັນການຂ້ຽນຕີບໍ? ເຮົາໄດ້ອະທິບາຍຕໍ່ມະນຸດຈາກທັດສະນະທີ່ແຕກຕ່າງ, ແຕ່ເຂົາກໍປະຕິບັດກັບສິ່ງນີ້ເປັນພຽງຄຳເວົ້າ ແລະ ຄຳສັ່ງສອນ. ມັນເປັນຄືກັບວ່າ ຖ້ອຍຄຳຂອງເຮົາເປັນສິນຄ້າທີ່ໃຊ້ການບໍ່ໄດ້ເຊິ່ງຖືກມະນຸດຂາຍເລຖິ້ມລ້າໆ. ສະນັ້ນ ເມື່ອເຮົາບອກຜູ້ຄົນວ່າ ພາຍຸໃຫຍ່ກຳລັງມາກືນກິນໝູ່ບ້ານເທິງພູເຂົາ, ບໍ່ມີໃຜຄິດຈິງຈັງກັບສິ່ງນັ້ນເລີຍ, ມີພຽງ ໜ້ອຍຄົນທີ່ຍ້າຍເຮືອນຂອງພວກເຂົາໜີດ້ວຍຄວາມສົງໄສ. ຄົນທີ່ເຫຼືອແມ່ນບໍ່ຍອມຍ້າຍໜີ ຄືກັບວ່າພວກເຂົາເມີນເສີຍ, ຄືກັບວ່າເຮົາເປັນນົກແອ່ນຈາກທ້ອງຟ້າ, ພວກເຂົາບໍ່ເຂົ້າໃຈຫຍັງໃນສິ່ງທີ່ເຮົາເວົ້າ. ມີພຽງແຕ່ເມື່ອພູເຂົາພັງທະລາຍລົງ ແລະແຜ່ນດິນໂລກຕັດແຍກອອກຈາກກັນ, ຜູ້ຄົນຈຶ່ງຄິດເຖິງພຣະທຳຂອງເຮົາ, ມີພຽງແຕ່ເມື່ອນັ້ນ ພວກເຂົາຈຶ່ງຕື່ນຂຶ້ນຈາກຄວາມຝັນຂອງພວກເຂົາ, ແຕ່ເວລານັ້ນໄດ້ມາເຖິງແລ້ວ, ພວກເຂົາຖືກທຳລາຍດ້ວຍນ້ຳຖ້ວມຄັ້ງໃຫຍ່, ຊາກສົບຂອງພວກເຂົາຟູເຕັມໜ້ານ້ຳ. ເມື່ອເຫັນເຖິງຄວາມທຸກທໍລະມານ ໃນແຜ່ນດິນໂລກ, ເຮົາກໍຫາຍໃຈໃຫຍ່ກັບຄວາມໂຊກຮ້າຍຂອງມະນຸດ. ເຮົາສະຫຼະເວລາຢ່າງຫຼວງຫຼາຍ ແລະ ຈ່າຍລາຄາທີ່ຍິ່ງໃຫຍ່ ຍ້ອນເຫັນແກ່ໂຊກຊະຕາຂອງມະນຸດ. ໃນຄວາມຄິດຂອງມະນຸດ ເຮົາບໍ່ມີຮູນ້ຳຕາ, ແຕ່ເຮົາ ເຊິ່ງເປັນ "ຄົນປະຫຼາດ" ນີ້ທີ່ບໍ່ມີຮູນ້ຳຕາ ໄດ້ຮ້ອງໄຫ້ຫຼາຍຄັ້ງເພື່ອມະນຸດ. ເຖິງຢ່າງໃດກໍຕາມ ມະນຸດບໍ່ຮູ້ຫຍັງໃນສິ່ງນີ້ເລີຍ, ເຂົາພຽງແຕ່ຫຼິ້ນເຄື່ອງຫຼິ້ນໃນມືຂອງເຂົາເທິງແຜ່ນດິນໂລກ ຄືກັບວ່າເຮົາບໍ່ມີຕົວຕົນ. ສະນັ້ນ ໃນສະຖານະການປັດຈຸບັນ, ຜູ້ຄົນຍັງຕາຍດ້ານ ແລະ ໂງ່ຈ້າ; ພວກເຂົາ

ຍັງ "ແຂງກະດ້າງ" ຢູ່ໃນຫ້ອງໃຕ້ດິນ ຄືກັບວ່າພວກເຂົາຍັງນອນຢູ່ໃນຖໍ້າ. ເມື່ອເຫັນເຖິງການກະທຳຂອງມະນຸດ, ທາງເລືອກດຽວຂອງເຮົາກໍຄືການຈາກໄປ...

ໃນສາຍຕາຂອງຜູ້ຄົນ, ເຮົາໄດ້ເຮັດຫຼາຍຢ່າງທີ່ດີສຳລັບມະນຸດ ແລະ ສະນັ້ນ ພວກເຂົາກໍເບິ່ງເຮົາເປັນແບບຢ່າງສຳລັບຍຸກປັດຈຸບັນ. ແຕ່ພວກເຂົາກໍບໍ່ເຄີຍຖືວ່າເຮົາເປັນກະສັດແຫ່ງໂຊກຊະຕາຂອງມະນຸດ ແລະ ພຣະຜູ້ສ້າງສິ່ງທັງປວງ. ມັນເປັນຄືກັບວ່າພວກເຂົາບໍ່ເຂົ້າໃຈເຮົາ. ເຖິງແມ່ນຜູ້ຄົນເຄີຍຮ້ອງວ່າ "ຄວາມເຂົ້າໃຈຈົ່ງຈະເລີນ" ບໍ່ມີໃຜໃຊ້ເວລາເພື່ອວິເຄາະຄຳວ່າ "ຄວາມເຂົ້າໃຈ" ເຊິ່ງສະແດງວ່າຜູ້ຄົນບໍ່ມີຄວາມປາຖະໜາທີ່ຈະຮັກເຮົາ. ໃນເວລາປັດຈຸບັນ, ຜູ້ຄົນບໍ່ເຄີຍເຊີດຊູເຮົາ, ເຮົາບໍ່ມີພື້ນທີ່ໃນຫົວໃຈຂອງພວກເຂົາ. ແລ້ວພວກເຂົາຈະສາມາດສະແດງຄວາມຮັກທີ່ແທ້ຈິງຕໍ່ເຮົາໃນມື້ແຫ່ງການທົນທຸກທີ່ຈະມາເຖິງໄດ້ແນວໃດ? ຄວາມຊອບທຳຂອງມະນຸດຍັງເປັນສິ່ງທີ່ບໍ່ມີຮູບປະທຳ, ສິ່ງທີ່ບໍ່ສາມາດເຫັນ ຫຼື ສຳຜັດໄດ້. ສິ່ງທີ່ເຮົາຕ້ອງການແມ່ນຫົວໃຈຂອງມະນຸດ, ຍ້ອນໃນຮ່າງກາຍຂອງມະນຸດຫົວໃຈຄືສິ່ງທີ່ລໍ້າຄ່າທີ່ສຸດ. ການກະທຳຂອງເຮົາບໍ່ເໝາະສົມທີ່ຈະຖືກຕອບແທນດ້ວຍຫົວໃຈຂອງມະນຸດບໍ? ເປັນຫຍັງຜູ້ຄົນຈຶ່ງບໍ່ມອບຫົວໃຈຂອງພວກເຮົາໃຫ້ກັບເຮົາ? ເປັນຫຍັງພວກເຂົາຈຶ່ງກອດຫົວໃຈຂອງພວກເຂົາແນບໄວ້ໃນເອິກຕົນເອງຢູ່ສະເໝີ ໂດຍບໍ່ເຕັມໃຈທີ່ຈະປ່ອຍໃຫ້ຫົວໃຈນັ້ນເປັນອິດສະຫຼະ? ຫົວໃຈຂອງມະນຸດສາມາດຮັບປະກັນຄວາມສັນຕິສຸກ ແລະ ຄວາມສຸກຕະຫຼອດຊີວິດຂອງຜູ້ຄົນບໍ? ເປັນຫຍັງເມື່ອເຮົາຮຽກຮ້ອງສິ່ງຕ່າງໆຈາກຜູ້ຄົນ, ພວກເຂົາຈຶ່ງກຳເອົາຂີ້ຝຸ່ນຈາກພື້ນດິນ ແລະ ໂຍນມັນໃສ່ເຮົາ? ນີ້ແມ່ນກົນອຸບາຍຂອງມະນຸດບໍ? ມັນເປັນຄືກັບວ່າພວກເຂົາກຳລັງພະຍາຍາມ ລອກຫຼວງຄົນກາຍໄປມາທີ່ບໍ່ມີບ່ອນໄປ, ລໍ້ລວງພວກເຂົາກັບສູ່ເຮືອນຂອງພວກເຂົາ ບ່ອນທີ່ພວກເຂົາຈະກາຍເປັນຄົນຕໍ່າຊ້າ ແລະ ຂ້າພວກເຂົາຖິ້ມ. ຜູ້ຄົນຍັງຕ້ອງການເຮັດສິ່ງດັ່ງກ່າວກັບເຮົາ. ມັນເປັນຄືກັບວ່າ ພວກເຂົາເປັນເພັດຊະຄາດ ທີ່ຈະຂ້າຄົນໂດຍບໍ່ກະພິບຕາ, ຄືກັບວ່າພວກເຂົາເປັນກະສັດຂອງມານຮ້າຍ, ສຳລັບຜູ້ຄົນດັ່ງກ່າວແລ້ວ ທຳມະຊາດທີສອງຂອງພວກເຂົາຄືການຂ້າຄົນ. ແຕ່ບັດນີ້ ຜູ້ຄົນມາຢູ່ຕໍ່ໜ້າເຮົາ, ຍັງປາຖະໜາທີ່ຈະໃຊ້ວິທີການດັ່ງກ່າວ, ເຊິ່ງພວກເຂົາກໍມີແຜນການຂອງພວກເຂົາ ແລະ ເຮົາກໍມີວິທີການຮັບມືຂອງເຮົາ. ເຖິງແມ່ນຜູ້ຄົນບໍ່ຮັກເຮົາ, ແລ້ວໃນເວລານີ້ເຮົາຈະບໍ່ເປີດເຜີຍວິທີການຮັບມືຂອງເຮົາຕໍ່ມະນຸດໄດ້ແນວໃດ? ເຮົາມີທັກສະທີ່ບໍ່ຈຳກັດ ແລະ ບໍ່ສາມາດວັດແທກໄດ້ໃນການຈັດການກັບມະນຸດ; ທຸກພາກສ່ວນຂອງເຂົາຈະຖືກຈັດການໂດຍເຮົາ ແລະ ຖືກດຳເນີນການໂດຍເຮົາເປັນການສ່ວນຕົວ. ໃນທີ່ສຸດແລ້ວ, ເຮົາຈະເຮັດໃຫ້ມະນຸດອົດກັ້ນກັບຄວາມເຈັບປວດດ້ວຍການພັດພາກຈາກສິ່ງທີ່ເຂົາຮັກ ແລະ ເຮັດໃຫ້ເຂົາຍອມຕໍ່ການຈັດແຈງຂອງເຮົາ ແລະ ໃນເວລານັ້ນ ຜູ້ຄົນຈະມີຫຍັງໃຫ້ຕໍ່ວ່າ? ທຸກສິ່ງທີ່ເຮົາເຮັດບໍ່ແມ່ນເພື່ອເຫັນແກ່ມະນຸດບໍ? ໃນເວລາຜ່ານມາ, ເຮົາບໍ່ເຄີຍບອກມະນຸດກ່ຽວກັບຂັ້ນຕອນຂອງພາລະກິດຂອງເຮົາ, ແຕ່ໃນປັດຈຸບັນ ແມ່ນບໍ່ຄືອະດີດ, ເນື່ອງຈາກວ່າເນື້ອຫາຂອງພາລະກິດຂອງເຮົາແມ່ນແຕກຕ່າງ, ເຮົາຈຶ່ງບອກຜູ້ຄົນລ່ວງໜ້າກ່ຽວກັບພາລະກິດຂອງເຮົາເພື່ອປ້ອງກັນບໍ່ໃຫ້ພວກເຂົາລົ້ມລົງຍ້ອນສິ່ງນີ້. ນີ້ບໍ່ແມ່ນການສັກຢາປ້ອງກັນໂລກທີ່ເຮົາໄດ້ສັກໃຫ້ກັບມະນຸດບໍ? ບໍ່ວ່າຍ້ອນເຫດຜົນໃດກໍຕາມ, ຜູ້ຄົນບໍ່ເຄີຍພິຈາລະນາພຣະທຳ ຂອງເຮົາຢ່າງຈິງຈັງ; ມັນ

ເປັນຄືກັບວ່າພວກເຂົາມີຄວາມອຶດຫິວ ແລະ ບໍ່ເລືອກໃນສິ່ງທີ່ພວກເຂົາກິນ ເຊິ່ງເຮັດໃຫ້ສະພາບທ້ອງຂອງພວກເຂົາບໍ່ດີ. ແຕ່ຜູ້ຄົນຮັບເອົາ "ສະພາບຮ່າງກາຍທີ່ມີສຸຂະພາບດີ" ຂອງພວກເຂົານັ້ນເປັນຕົ້ນທຶນ ແລະ ບໍ່ສົນໃຈຕໍ່ຄຳຕັກເຕືອນຂອງ "ທ່ານໝໍ". ເມື່ອເຫັນເຖິງຄວາມດື້ດ້ານຂອງພວກເຂົາ, ເຮົາກໍເປັນຫ່ວງມະນຸດ. ຍ້ອນຜູ້ຄົນຄືເດັກນ້ອຍ ແລະ ຍັງບໍ່ໄດ້ປະສົບກັບຊີວິດມະນຸດເທື່ອ, ພວກເຂົາຈຶ່ງບໍ່ມີຄວາມຢ້ານກົວ; ໃນຫົວໃຈຂອງພວກເຂົາ, ຄຳວ່າ "ຊີວິດມະນຸດ" ບໍ່ມີຢູ່ຈິງ, ພວກເຂົາບໍ່ຄຳນຶງເຖິງສິ່ງເຫຼົ່ານັ້ນ ແລະ ພຽງແຕ່ເບື່ອໜ່າຍພຣະທຳຂອງເຮົາ, ຄືກັບວ່າເຮົາໄດ້ກາຍມາເປັນແມ່ຍິງເຖົ້າທີ່ເວົ້າໄປທົ່ວທິບ. ສະຫຼຸບແລ້ວ ບໍ່ວ່າຈະກໍລະນີໃດກໍຕາມ ເຮົາຫວັງວ່າ ຜູ້ຄົນຈະສາມາດເຂົ້າໃຈຫົວໃຈຂອງເຮົາ, ເພາະວ່າເຮົາບໍ່ມີຄວາມປາຖະໜາທີ່ຈະສົ່ງມະນຸດໄປສູ່ດິນແດນແຫ່ງຄວາມຕາຍ. ເຮົາຫວັງວ່າມະນຸດຈະສາມາດເຂົ້າໃຈຄວາມຮູ້ສຶກຂອງເຮົາໃນຊ່ວງເວລານີ້ ແລະ ຄຳນຶງເຖິງພາລະທີ່ເຮົາແບກຮັບໃນເວລານີ້.

ວັນທີ 26 ເມສາ 1992

# ບົດທີ 37

ໃນທຸກພາລະກິດທີ່ເຮົາໄດ້ເຮັດຕະຫຼອດຍຸກຕ່າງໆ, ທຸກຂັ້ນຕອນຂອງພາລະກິດນັ້ນ ແມ່ນພົວພັນກັບວິທີການເຮັດພາລະກິດທີ່ເໝາະສົມຂອງເຮົາ. ດ້ວຍເຫດນີ້, ປະຊາຊົນທີ່ເປັນທີ່ຮັກຂອງເຮົາຈຶ່ງຖືກເຮັດໃຫ້ບໍລິສຸດຂຶ້ນ ແລະ ບໍລິສຸດຂຶ້ນ ແລະ ກໍເໝາະສົມສຳລັບການນຳໃຊ້ຂອງເຮົາຫຼາຍຂຶ້ນ ແລະ ຫຼາຍຂຶ້ນ. ຢ່າງໃດກໍຕາມ, ຍ້ອນເຫດຜົນດຽວກັນນີ້ "ສິ່ງທີ່ໜ້າເສຍດາຍ" ກໍຄື ເມື່ອວິທີການເຮັດພາລະກິດຂອງເຮົາເພີ່ມຂຶ້ນ ຈຳນວນຜູ້ຄົນກໍຫຼຸດລົງ ແລະ ນີ້ເຮັດໃຫ້ພວກເຂົາຕ້ອງພິຈາລະນາຢ່າງເລິກເຊິ່ງ. ແນ່ນອນຢູ່ແລ້ວວ່າ ພາລະກິດຂອງປັດຈຸບັນນີ້ຍັງບໍ່ຖືກຍົກເວັ້ນ ແລະ ຄົນສ່ວນໃຫຍ່ຍັງຕິດຢູ່ກັບການພິຈາລະນາອີກຄັ້ງ; ສະນັ້ນ, ເນື່ອງຈາກການປ່ຽນແປງຕໍ່ວິທີການຂອງເຮົາ ຈຶ່ງຍັງມີບາງຄົນທີ່ຕ້ອງໄດ້ຖອນໂຕ. ອາດຈະອະທິບາຍສິ່ງນີ້ດ້ວຍວິທີນີ້: ນີ້ແມ່ນສິ່ງທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ ແຕ່ບໍ່ແມ່ນສິ່ງທີ່ເຮົາໄດ້ເຮັດ. ນັບແຕ່ການຊົງສ້າງ, ຫຼາຍຄົນໄດ້ເສື່ອມໂຊມ ແລະ ຫຼາຍຄົນໄດ້ສູນເສຍແນວທາງຂອງພວກເຂົາຍ້ອນວິທີການເຮັດພາລະກິດຂອງເຮົາ. ຢ່າງໃດກໍຕາມ, ເຮົາບໍ່ສົນໃຈໃນສິ່ງທີ່ຜູ້ຄົນເຮັດ. ເຖິງແມ່ນວ່າ ພວກເຂົາຈະຮູ້ສຶກວ່າ ເຮົາບໍ່ມີຄວາມກະລຸນາ ຫຼື ໂຫດຮ້າຍຫຼາຍກໍຕາມ ແລະ ເຖິງແມ່ນວ່າຄວາມເຂົ້າໃຈຂອງພວກເຂົາຈະຖືກຕ້ອງ ຫຼື ບໍ່ກໍຕາມ, ເຮົາຈະຫຼີກເວັ້ນໃນການອະທິບາຍ. ກ່ອນອື່ນໃຫ້ພວກເຮົາມາສົນທະນາ ກ່ຽວກັບປະເດັນຫຼັກຂອງການສົນທະນານີ້ ເພື່ອວ່າ ທຸກຄົນອາດຈະໄດ້ຮັບຄວາມເຂົ້າໃຈຢ່າງທົ່ວເຖິງ ແລະ ເພື່ອຫ້າມບໍ່ໃຫ້ພວກເຂົາບໍ່ມີຄວາມເຂົ້າໃຈວ່າ ເປັນຫຍັງພວກເຂົາຈຶ່ງທົນທຸກ. ເຮົາຈະບໍ່ບັງຄັບໃຫ້ຜູ້ຄົນທົນທຸກຢ່າງງຽບໆຄືກັບຄົນປາກກືກ; ກົງກັນຂ້າມ, ເຮົາຈະອະທິບາຍທຸກສິ່ງໃຫ້ຊັດເຈນ ເພື່ອບໍ່ໃຫ້ພວກເຂົາຈົ່ມໃຫ້ເຮົາ. ມື້ໜຶ່ງ ເຮົາຈະເຮັດໃຫ້ທຸກຄົນກ່າວສັນລະເສີນດ້ວຍຄວາມຈິງໃຈໃນທ່າມກາງການຂ້ຽນຕີພວກເຂົາ. ພວກເຈົ້າຕົກລົງເຫັນດີກັບວິທີນີ້ບໍ? ສິ່ງນີ້ຕອບສະໜອງຄວາມຕ້ອງການຂອງຜູ້ຄົນບໍ?

ກ່ອນຈະເລີ່ມຕົ້ນຂອງຍຸກແຫ່ງການຂ້ຽນຕີ, ກ່ອນອື່ນໝົດ ເຮົາຈະບອກຜູ້ຄົນເຖິງຄວາມໝາຍທົ່ວໄປທີ່ຢູ່ເບື້ອງຫຼັງຂອງ "ຍຸກ" ນີ້ເພື່ອວ່າ ພວກເຂົາຈະບໍ່ລ່ວງເກີນເຮົາ. ເປັນຕົ້ນແມ່ນເຮົາຈະເຮັດການຈັດແຈງສຳລັບພາລະກິດຂອງເຮົາທີ່ຈະບໍ່ມີໃຜປ່ຽນແປງໄດ້ ແລະ ແນ່ນອນ ເຮົາຈະບໍ່ປ່ອຍຜູ້ໃດກໍຕາມທີ່ປ່ຽນແປງພາລະກິດເຫຼົ່ານັ້ນໄປຢ່າງງ່າຍດາຍ: ເຮົາຈະປະນາມພວກເຂົາ. ພວກເຈົ້າຈະຈື່ສິ່ງນັ້ນບໍ? ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ແມ່ນ "ການສັກຢາວັກຊີນ". ດ້ວຍວິທີການໃໝ່ນີ້, ກ່ອນອື່ນໝົດ ທຸກຄົນຕ້ອງເຂົ້າໃຈວ່າ ເປົ້າໝາຍທຳອິດທີ່ຕ້ອງບັນລຸແມ່ນການໄດ້ຮັບຄວາມເຂົ້າໃຈ ກ່ຽວກັບສະພາບຕົວຈິງຂອງພວກເຂົາເອງ. ກ່ອນໄດ້ຮັບຄວາມເຂົ້າໃຈບາງຢ່າງກ່ຽວກັບຕົວເອງ, ຈະບໍ່ມີຜູ້ໃດໄດ້ຮັບອະນຸຍາດໃຫ້ເວົ້າຢ່າງບໍ່ລະມັດລະວັງໃນຄຣິສຕະຈັກ ແລະ ເຮົາຈະຂ້ຽນຕີຜູ້ທີ່ລະເມີດກົດລະບຽບນີ້ຢ່າງແນ່ນອນ. ຈາກມື້ນີ້ເປັນຕົ້ນໄປ, ອັກຄະສາວົກທັງໝົດຈະຖືກຈົດຊື່ເຂົ້າໃນຄຣິສຕະຈັກ ແລະ ຈະຖືກຫ້າມບໍ່ໃຫ້ເຄື່ອນຍ້າຍໄປບ່ອນນັ້ນບ່ອນນີ້ຕາມໃຈ; ສິ່ງນັ້ນຈະມີໝາກຜົນພຽງເລັກນ້ອຍ. ເບິ່ງຄືວ່າ ພວກເຂົາທຸກຄົນໄດ້ເຮັດໜ້າທີ່ຂອງຕົວເອງສຳເລັດ ແຕ່ທີ່ຈິງແລ້ວແມ່ນກຳລັງຫຼອກລວງເຮົາ. ບໍ່ວ່າຫຍັງເກີດຂຶ້ນ

ກໍຕາມ, ມື້ນີ້ແມ່ນລ້ອນແລ້ວແຕ່ເປັນອະດີດໄປແລ້ວ ແລະ ບໍ່ຕ້ອງນຳເອົາມັນຂຶ້ນມາອີກ. ນັບແຕ່ນີ້ເປັນຕົ້ນໄປ, ຄຳສັບທີ່ວ່າ "ອັກຄະສາວົກ" ຈະຖືກລຶບລ້າງ ແລະ ຈະບໍ່ຖືກໃຊ້ອີກຕໍ່ໄປ ເພື່ອວ່າ ທຸກຄົນຈະລົງມາຈາກ "ຕຳແໜ່ງ" ຂອງພວກເຂົາ ແລະ ມາຮູ້ຈັກຕົວເອງ. ແນ່ນອນຢູ່ແລ້ວວ່າ ນີ້ກໍເພື່ອຄວາມລອດພົ້ນຂອງພວກເຂົາ. "ຕຳແໜ່ງ" ບໍ່ແມ່ນມົງກຸດ; ມັນເປັນພຽງຄຳສັບກ່ຽວກັບການທັກທາຍ. ພວກເຈົ້າເຂົ້າໃຈຄວາມໝາຍຂອງເຮົາບໍ? ຜູ້ທີ່ນຳພາຄຣິສຕະຈັກຍັງຈະດຳລົງຊີວິດແຫ່ງຄຣິສຕະຈັກພາຍໃນຄຣິສຕະຈັກຂອງພວກເຂົາເອງ ເຖິງແມ່ນວ່າ ນີ້ບໍ່ແມ່ນກົດລະບຽບທີ່ຕາຍຕົວຢ່າງແນ່ນອນກໍຕາມ. ເມື່ອຈຳເປັນ ພວກເຂົາກໍອາດຈະຢ້ຽມຢາມຄຣິສຕະຈັກໂດຍປະສານກັບອະດີດອັກຄະສາວົກຄົນອື່ນໆ. ສິ່ງທີ່ສຳຄັນທີ່ສຸດກໍຄື ຕ້ອງມີການສົນທະນາກ່ຽວກັບຄຣິສຕະຈັກຫຼາຍຂຶ້ນ ນອກຈາກວ່າບໍ່ມີສະມາຊິກຜູ້ໃດໃນພວກເຂົາດຳລົງຊີວິດຂອງຄຣິສຕະຈັກຢ່າງແທ້ຈິງ. ຢ່າງໃດກໍຕາມ, ເຮົາຕ້ອງເນັ້ນອີກວ່າ ພວກເຈົ້າທຸກຄົນຕ້ອງມີຄວາມສາມັກຄີກັນໃນການຮູ້ຈັກຕົວເອງ ແລະ ໃນການຕໍ່ຕ້ານມັງກອນແດງທີ່ຍິ່ງໃຫຍ່: ນີ້ຄືຄວາມປະສົງຂອງເຮົາ. ຜູ້ຄົນຈະເວົ້າຫຼາຍສໍ່າໃດແມ່ນບໍ່ສຳຄັນ; ກົງກັນຂ້າມ, ສຳຄັນທີ່ສຸດ ຄືປະຊາຊົນຂອງເຮົາທຸກຄົນສາມາດມາຮ່ວມກັນເປັນໜຶ່ງດຽວ ເພາະວ່ານັ້ນແມ່ນວິທີດຽວ ທີ່ຈະເປັນພະຍານຢ່າງແທ້ຈິງ. ໃນອະດີດ, ທຸກຄົນໄດ້ເວົ້າວ່າ ພວກເຂົາຈະມາຮູ້ຈັກຕົວເອງ ແຕ່ເຮົາກໍໄດ້ກ່າວພຣະທຳຢ່າງນັບບໍ່ຖ້ວນ, ແລ້ວ ພວກເຈົ້າໄດ້ເຂົ້າໃຈຕົວເອງຫຼາຍສໍ່າໃດແລ້ວ? ຍິ່ງຕຳແໜ່ງສູງເທົ່າໃດ ຄົນກໍຍິ່ງຍາກທີ່ຈະປະວາງຕົວເອງຫຼາຍເທົ່ານັ້ນ, ຄວາມຫວັງກໍຍິ່ງຫຼາຍຂຶ້ນ ແລະ ຍິ່ງຈະທົນທຸກຫຼາຍຂຶ້ນເມື່ອຖືກຂ້ຽນຕີ. ນີ້ແມ່ນຄວາມລອດພົ້ນຂອງເຮົາທີ່ມີໃຫ້ແກ່ມະນຸດ. ພວກເຈົ້າເຂົ້າໃຈບໍ? ຢ່າໄດ້ພຽງຖືເບົາກັບສິ່ງນີ້; ການເຮັດເຊັ່ນນັ້ນຈະຕື້ນເກີນໄປ ແລະ ບໍ່ມີຄຸນຄ່າ. ພວກເຈົ້າເຂົ້າໃຈເຖິງຄວາມໝາຍທີ່ເຊື່ອງຢູ່ໃນນີ້ບໍ? ຖ້າສະມາຊິກຂອງຄຣິສຕະຈັກສາມາດເຂົ້າໃຈຕົວເອງຢ່າງແທ້ຈິງ ແລ້ວສິ່ງນີ້ຈະສະແດງໃຫ້ເຫັນວ່າ ຜູ້ຄົນປະເພດນັ້ນຮັກເຮົາຢ່າງແທ້ຈິງ. ເວົ້າໄດ້ວ່າ ຖ້າພວກເຈົ້າບໍ່ກິນເຂົ້າຮ່ວມພາກັບຜູ້ຄົນ ພວກເຈົ້າກໍຈະບໍ່ເຂົ້າໃຈເຖິງຄວາມຍາກລຳບາກຂອງພວກເຂົາ. ພວກເຈົ້າຈະຕີຄວາມໝາຍຂອງຄຳເວົ້ານີ້ແນວໃດ? ໃນທີ່ສຸດແລ້ວ, ເຮົາຈະເຮັດໃຫ້ທຸກຄົນຮູ້ຈັກຕົວເອງໃນຊ່ວງເວລາການຂ້ຽນຕີພວກເຂົາ ແລະ ເຮັດໃຫ້ພວກເຂົາຮ້ອງເພງ ແລະ ຫົວໃນຂະນະທີ່ສິ່ງນັ້ນເກີດຂຶ້ນ. ພວກເຈົ້າຈະມີຄວາມເຊື່ອທີ່ແທ້ຈິງເພື່ອເຮັດໃຫ້ເຮົາພໍໃຈບໍ? ສະນັ້ນ, ພວກເຈົ້າຄວນເຮັດຫຍັງໃນການປະຕິບັດຂອງພວກເຈົ້າ? ນັບແຕ່ນີ້ເປັນຕົ້ນໄປ, ວຽກງານຂອງແຕ່ລະຄຣິສຕະຈັກຈະຖືກຈັດການໂດຍບຸກຄົນທີ່ເໝາະສົມໃນຄຣິສຕະຈັກນັ້ນໆ ແລະ ອັກຄະສາວົກຈະພຽງແຕ່ດຳລົງຊີວິດຂອງຄຣິສຕະຈັກ. ນີ້ແມ່ນເອີ້ນວ່າ "ການປະສົບກັບຊີວິດ". ພວກເຈົ້າເຂົ້າໃຈບໍ?

ກ່ອນການຂ້ຽນຕີຈະມາເຖິງມະນຸດຢ່າງເປັນທາງການ, ກ່ອນອື່ນໝົດ ເຮົາຈະເຮັດ "ພາລະກິດແຫ່ງການທັກທາຍ" ໃນຜູ້ຄົນ ເພື່ອວ່າໃນທີ່ສຸດ ພວກເຂົາທຸກຄົນອາດຈະເຮັດໃຫ້ເຮົາພໍໃຈ. ແມ່ນແຕ່ຜູ້ທີ່ຈະຖອນໂຕ, ພວກເຂົາກໍຕ້ອງທົນທຸກ ແລະ ສຳເລັດໃນການເປັນພະຍານກ່ອນຈະອອກໄປ ບໍ່ສະນັ້ນ ເຮົາຈະບໍ່ປ່ອຍພວກເຂົາໄປຢ່າງງ່າຍດາຍ. ນີ້ສະແດງໃຫ້ເຫັນເຖິງອຸປະນິໄສຂອງເຮົາທີ່ບໍ່ສາມາດທົນຕໍ່ການລ່ວງເກີນຂອງຜູ້ຄົນ ພ້ອມກັບອຸປະນິໄສຂອງເຮົາທີ່ເຮັດໃນສິ່ງທີ່ເຮົາເວົ້າໃຫ້ສຳເລັດ. ສະນັ້ນ,

ເຮົາຈຶ່ງຈະບັນລຸຄຳສັນຍາຂອງເຮົາທີ່ວ່າ “ເຮົາຈິງຈັງໃນສິ່ງທີ່ເຮົາເວົ້າ, ສິ່ງທີ່ເຮົາເວົ້າຈະຖືກເຮັດສຳເລັດ ແລະ ສິ່ງທີ່ເຮົາເຮັດຈະມີຢູ່ຕະຫຼອດໄປ”. ເມື່ອພຣະທຳອອກຈາກປາກຂອງເຮົາ, ພຣະວິນຍານຂອງເຮົາກໍເລີ່ມເຮັດພາລະກິດຂອງພຣະອົງເຊັ່ນກັນ. ໃຜຈະກ້າຫຼິ້ນກັບ “ຂອງຫຼິ້ນ” ທີ່ພວກເຂົາຖືໃນມືຂອງພວກເຂົາຢ່າງເຕັມໃຈບໍ? ທຸກຄົນຕ້ອງຍອມຮັບການຂ້ຽນຕີຂອງເຮົາຢ່າງເຄົາລົບ ແລະ ເຊື່ອຟັງ. ໃຜຈະສາມາດລົບໜີຈາກສິ່ງນີ້ໄດ້? ສາມາດເປັນໄປໄດ້ບໍ່ວ່າ ນອກຈາກເຮົາແລ້ວຈະມີເສັ້ນທາງອື່ນອີກ? ມື້ນີ້ເຮົາໄດ້ອະນຸຍາດໃຫ້ເຈົ້າຢູ່ເທິງແຜ່ນດິນໂລກ ແລະ ເຈົ້າກໍດີໃຈ; ມື້ອື່ນເຮົາຈະອະນຸຍາດໃຫ້ເຈົ້າມາຢູ່ໃນສະຫວັນ ແລະ ເຈົ້າຈະໃຫ້ການສັນລະເສີນ. ມື້ຮືເຮົາຈະວາງເຈົ້າໄວ້ຢູ່ໃຕ້ດິນ ເຊິ່ງເປັນບ່ອນທີ່ເຈົ້າຈະຖືກຂ້ຽນຕີ. ສິ່ງເຫຼົ່ານີ້ທັງໝົດບໍ່ແມ່ນຄວາມຕ້ອງການຈາກພາລະກິດຂອງເຮົາບໍ? ໃຜບໍ່ທົນທຸກກັບຄວາມໂຊກຮ້າຍ ແລະ ໄດ້ຮັບພອນເພື່ອຄວາມຕ້ອງການຂອງເຮົາແດ່? ພວກເຈົ້າສາມາດຖືກຍົກເວັ້ນບໍ? ໃນຖານະທີ່ເປັນປະຊາຊົນຂອງເຮົາຢູ່ເທິງແຜ່ນດິນໂລກ, ພວກເຈົ້າຄວນເຮັດຫຍັງແດ່ ເພື່ອຄວາມຕ້ອງການ ແລະ ຄວາມປະສົງຂອງເຮົາ? ເປັນໄປໄດ້ບໍວ່າ ພວກເຈົ້າສັນລະເສີນນາມທີ່ບໍລິສຸດຂອງເຮົາດ້ວຍຄຳເວົ້າ ໃນຂະນະທີ່ໃນຫົວໃຈຂອງພວກເຈົ້າ, ພວກເຈົ້າກຽດຊັງເຮົາ? ການເຮັດພາລະກິດເພື່ອເຮົາ ແລະ ການເຮັດຕາມໃຈເຮົາ ພ້ອມກັບການເຂົ້າໃຈຕົວເອງ ແລະ ການຕໍ່ຕ້ານມັງກອນແດງທີ່ຍິ່ງໃຫຍ່, ສິ່ງເຫຼົ່ານີ້ບໍ່ແມ່ນວຽກງານທີ່ງ່າຍ ແລະ ພວກເຈົ້າຕ້ອງຈ່າຍລາຄາໃນການເຮັດສິ່ງດັ່ງກ່າວນັ້ນ. ເມື່ອເຮົາເວົ້າວ່າ “ລາຄາ”, ພວກເຈົ້າຄິດວ່າ ເຮົາໝາຍເຖິງຫຍັງ? ເຮົາຈະບໍ່ສົນທະນາກ່ຽວກັບສິ່ງນີ້ໃນຕອນນີ້ ແລະ ເຮົາຈະບໍ່ໃຫ້ຄຳຕອບໂດຍກົງແກ່ຜູ້ຄົນ. ກົງກັນຂ້າມ, ເຮົາຈະອະນຸຍາດໃຫ້ພວກເຂົາພິຈາລະນາດ້ວຍຕົວເອງ ແລະ ຫຼັງຈາກນັ້ນ ແມ່ນໃຫ້ຕອບຄຳຖາມຂອງເຮົາໃນທາງປະຕິບັດດ້ວຍວິທີການກະທຳ ແລະ ການປະພຶດຂອງພວກເຂົາ. ພວກເຈົ້າສາມາດເຮັດສິ່ງນັ້ນໄດ້ບໍ?

ວັນທີ 27 ເມສາ 1992

# ບົດທີ 38

ບໍ່ເຄີຍມີຮ່ອງຮອຍຂອງເຮົາ ແລະ ບໍ່ເຄີຍມີການຊີ້ນຳຂອງພຣະທຳຂອງເຮົາໃນສິ່ງທີ່ມະນຸດຜະເຊີນ. ດ້ວຍເຫດນັ້ນ, ເຮົາຈຶ່ງເຮັດໃຫ້ມະນຸດຢູ່ຫ່າງຕະຫຼອດ ແລະ ຫຼັງຈາກນັ້ນກໍຈາກເຂົາໄປ. ເຮົາກຽດຊັງຄວາມບໍ່ເຊື່ອຟັງຂອງມະນຸດ. ເຮົາບໍ່ຮູ້ວ່າເປັນຫຍັງ; ເບິ່ງຄືວ່າເຮົາກຽດຊັງມະນຸດນັບແຕ່ຕອນຕົ້ນ ແລະ ເຖິງຢ່າງນັ້ນ ເຮົາກໍຮູ້ສຶກເຫັນອົກເຫັນໃຈເຂົາຢ່າງເລິກເຊິ່ງ. ສະນັ້ນ, ຜູ້ຄົນຈຶ່ງມີສອງທັດສະນະຕໍ່ເຮົາສະເໝີ ເນື່ອງຈາກວ່າ ເຮົາຮັກມະນຸດ ແລະ ເຮົາກໍຊັງມະນຸດເຊັ່ນກັນ. ຜູ້ໃດໃນບັນດາມະນຸດທີ່ສົນໃຈຄວາມຮັກຂອງເຮົາຢ່າງແທ້ຈິງ? ແລ້ວມີຜູ້ໃດທີ່ສົນໃຈຄວາມກຽດຊັງຂອງເຮົາ? ໃນສາຍຕາຂອງເຮົາ, ມະນຸດແມ່ນສິ່ງທີ່ຕາຍໄປແລ້ວ ທີ່ບໍ່ມີຊີວິດຄືກັບຮູບປັ້ນດິນໜຽວໃນທ່າມກາງທຸກສິ່ງ. ຍ້ອນຄວາມບໍ່ເຊື່ອຟັງຂອງເຂົາ, ມະນຸດຈຶ່ງໄດ້ກະຕຸ້ນຄວາມໂມໂຫຂອງເຮົາເປັນບາງຄັ້ງບາງຄາວ. ໃນເວລາທີ່ເຮົາດຳລົງຊີວິດໃນທ່າມກາງມະນຸດ, ພວກເຂົາກໍມີຮອຍຍິ້ມເລັກນ້ອຍເມື່ອເຮົາມາຮອດຢ່າງກະທັນຫັນ ຍ້ອນພວກເຂົາ “ສະແຫວງຫາ” ເຮົາຢ່າງມີສະຕິຕະຫຼອດເວລາ ຄືກັບວ່າ ເຮົາກຳລັງຫຼິ້ນກັບມະນຸດຢູ່ແຜ່ນດິນໂລກ. ພວກເຂົາບໍ່ເຄີຍຈິງຈັງກັບເຮົາ ແລະ ຍ້ອນທັດສະນະຂອງພວກເຂົາທີ່ມີຕໍ່ເຮົາ ເຮົາຈຶ່ງບໍ່ມີທາງເລືອກນອກຈາກ “ອອກບຳນານ” ຈາກ “ໜ່ວຍງານເຮັດວຽກ” ຂອງມະນຸດ. ເຖິງຢ່າງໃດກໍຕາມ, ເຮົາປາຖະໜາທີ່ຈະກ່າວວ່າ ເຖິງແມ່ນວ່າເຮົາຈະ “ອອກບຳນານ” ແຕ່ “ເບ້ຍບຳນານ” ຂອງເຮົາແມ່ນບໍ່ສາມາດຂາດເງິນແມ່ນແຕ່ກີບດຽວ. ຍ້ອນ “ຄວາມອາວຸໂສ” ຂອງເຮົາໃນ “ໜ່ວຍງານເຮັດວຽກ” ຂອງມະນຸດ, ເຮົາຈຶ່ງສືບຕໍ່ຮຽກຮ້ອງເງິນຈາກພວກເຂົາທີ່ຍັງຕິດໜີ້ເຮົາ. ເຖິງແມ່ນວ່າພວກເຂົາຈະໄດ້ຈາກເຮົາໄປ ແຕ່ພວກເຂົາຈະສາມາດໜີພົ້ນຈາກກຳມືຂອງເຮົາໄດ້ແນວໃດ? ເຮົາເຄີຍວາງມືຂອງເຮົາຈາກການຈັບກຸມຜູ້ຄົນໃນລະດັບໃດໜຶ່ງ ໂດຍອະນຸຍາດໃຫ້ພວກເຂົາເຮັດຕາມໃຈຢ່າງເປັນອິດສະຫຼະໃນຄວາມປາຖະໜາທາງເນື້ອໜັງຂອງພວກເຂົາ ແລະ ຍ້ອນສິ່ງນີ້ ພວກເຂົາຈຶ່ງກ້າປະພຶດຕົນໃນລັກສະນະແບບດື້ດ້ານ ໂດຍບໍ່ມີການຄວບຄຸມໃດໆ ເຊິ່ງສາມາດເຫັນໄດ້ວ່າ ພວກເຂົາບໍ່ຮັກເຮົາຢ່າງແທ້ຈິງ ເນື່ອງຈາກພວກເຂົາທຸກຄົນກຳລັງດຳລົງຊີວິດໃນເນື້ອໜັງ. ເປັນໄປໄດ້ບໍວ່າຄວາມຮັກທີ່ແທ້ຈິງແມ່ນຖືກມອບໃຫ້ເພື່ອຕອບແທນສຳລັບເນື້ອໜັງ? ເປັນໄປໄດ້ບໍວ່າສິ່ງທີ່ເຮົາຂໍຈາກມະນຸດແມ່ນເປັນພຽງ “ຄວາມຮັກ” ຂອງເນື້ອໜັງ? ຖ້ານີ້ແມ່ນກໍລະນີ້ແທ້ຈິງ ແລ້ວມະນຸດຈະມີຄຸນຄ່າຫຍັງ? ມະນຸດທຸກຄົນແມ່ນຂີ້ເຫຍື້ອທີ່ບໍ່ມີຄ່າ! ຖ້າບໍ່ແມ່ນຍ້ອນ “ພະລັງພິເສດ” ໃນການອົດທົນຂອງເຮົາ, ເຮົາຈາກມະນຸດໄປແຕ່ດົນນານແລ້ວ. ເປັນຫຍັງຕ້ອງທົນຢູ່ກັບພວກເຂົາເພື່ອຖືກ “ຂົ່ມເຫັງ”? ເຖິງຢ່າງນັ້ນ ເຮົາກໍຍັງອົດທົນ. ເຮົາຕ້ອງການຄຳອະທິບາຍກ່ຽວກັບ “ທຸລະກິດ” ຂອງມະນຸດ. ເມື່ອພາລະກິດຂອງເຮົາຢູ່ແຜ່ນດິນໂລກສິ້ນສຸດລົງ, ເຮົາຈະຂຶ້ນສູງສູ່ທ້ອງຟ້າ ເພື່ອພິພາກສາ “ເຈົ້ານາຍ” ຂອງທຸກສິ່ງ; ນີ້ແມ່ນພາລະກິດຫຼັກຂອງເຮົາ ເນື່ອງຈາກຄວາມກຽດຊັງຂອງເຮົາທີ່ມີຕໍ່ມະນຸດໄດ້ຮອດລະດັບໃດໜຶ່ງແລ້ວ. ມີຜູ້ໃດທີ່ຈະບໍ່ກຽດຊັງສັດຕູຂອງເຂົາ? ມີຜູ້ໃດທີ່ຈະບໍ່ກຳຈັດສັດຕູຂອງເຂົາ? ໃນສະຫວັນ, ຊາຕານແມ່ນສັດຕູຂອງເຮົາ; ຢູ່ແຜ່ນດິນໂລກ ມະນຸດແມ່ນສັດຕູຂອງເຮົາ. ຍ້ອນການຮ່ວມກັນລະຫວ່າງ

ສະຫວັນ ແລະ ແຜ່ນດິນໂລກ, ເຮົາຈຶ່ງຖືວ່າພວກເຂົາທຸກຄົນມີຄວາມຜິດຈົນເຖິງເກົ້າຊົ່ວໂຄດ ແລະ ຈະບໍ່ໄດ້ຮັບການໃຫ້ອະໄພແມ່ນແຕ່ຄົນດຽວ. ແລ້ວຜູ້ໃດບອກພວກເຂົາໃຫ້ຕໍ່ຕ້ານເຮົາ? ຜູ້ໃດບອກພວກເຂົາບໍ່ໃຫ້ເຊື່ອຟັງເຮົາ? ເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດຕັດຂາດຄວາມສຳພັນທີ່ຍັງເຫຼືອຢູ່ຂອງພວກເຂົາຈາກທຳມະຊາດເກົ່າຂອງພວກເຂົາ? ເປັນຫຍັງເນື້ອໜັງຂອງພວກເຂົາຈຶ່ງອອກໜໍ່ພາຍໃນພວກເຂົາ? ທັງໝົດນີ້ແມ່ນຫຼັກຖານຂອງການພິພາກສາມະນຸດຂອງເຮົາ. ຜູ້ໃດກ້າທີ່ຈະບໍ່ອ່ອນນ້ອມຕໍ່ຄວາມຈິງແດ່? ຜູ້ໃດກ້າທີ່ຈະເວົ້າວ່າ ການພິພາກສາຂອງເຮົາແມ່ນຖືກຍ້ອມສີດ້ວຍອາລົມ? ເຮົາແຕກຕ່າງຈາກມະນຸດ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງຈາກເຂົາໄປ ເພາະເຮົາບໍ່ແມ່ນໜຶ່ງໃນເຜົ່າພັນມະນຸດ.

ສຳລັບທຸກສິ່ງທີ່ເຮົາປະຕິບັດແມ່ນມີພື້ນຖານ ແລະ ຮາກຖານ; ເມື່ອມະນຸດ "ເປີດເຜີຍ" "ຄວາມແທ້ຈິງ" ໃຫ້ກັບເຮົາດ້ວຍປາກຂອງເຂົາ ເຮົາກໍຄຸ້ມກັນເຂົາໄປຍັງ "ລານປະຫານ" ເນື່ອງຈາກວ່າການລ່ວງເກີນຂອງມະນຸດແມ່ນພຽງພໍທີ່ຈະສົມຄວນໄດ້ຮັບການຂ້ຽນຕີຈາກເຮົາ. ສະນັ້ນ ເຮົາຈຶ່ງບໍ່ໄດ້ຕັດສິນໃຫ້ມີການຂ້ຽນຕີແບບຫຼັບຫູຫຼັບຕາ ແຕ່ຈະຂ້ຽນຕີຜູ້ຄົນຕາມສະຖານະການທີ່ແທ້ຈິງກ່ຽວກັບການລ່ວງເກີນຂອງພວກເຂົາ. ຖ້າບໍ່ແມ່ນຍ້ອນຄວາມກະບົດຂອງພວກເຂົາ, ມະນຸດຈະບໍ່ມີວັນກົ້ມລົງ ແລະ ຍອມຮັບຄວາມຜິດຂອງພວກເຂົາກັບເຮົາ. ມັນເປັນຍ້ອນວ່າພວກເຂົາໄດ້ມາເຖິງສະພາບທົ່ວໄປໃນປັດຈຸບັນ, ພວກເຂົາທຸກຄົນຈຶ່ງກົ້ມຫົວຂອງພວກເຂົາແບບບໍ່ເຕັມໃຈ ເພາະໃນໃຈຂອງພວກເຂົາ ພວກເຂົາຍັງບໍ່ເຊື່ອ. ເຮົາໄດ້ເອົາ "ນໍ້າແບຣຽມ" ໃຫ້ຜູ້ຄົນດື່ມ ແລະ ດ້ວຍເຫດນັ້ນ ອາໄວຍະວະພາຍໃນຂອງພວກເຂົາຈຶ່ງງາມ ແລະ ຊັດເຈນຢູ່ໃນ "ເຄື່ອງຖ່າຍພາບລັງສີ". ຄວາມສົກກະປົກ ແລະ ຄວາມບໍ່ບໍລິສຸດບໍ່ໄດ້ຖືກລ້າງອອກຈາກທ້ອງຂອງຜູ້ຄົນ; ສິ່ງສົກກະປົກທຸກປະເພດໄຫຼຜ່ານເສັ້ນເລືອດຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພິດພາຍໃນຮ່າງກາຍຂອງພວກເຂົາຈຶ່ງເພີ່ມຂຶ້ນເລື້ອຍໆ. ຍ້ອນຜູ້ຄົນດຳລົງຊີວິດໃນສະພາບດັ່ງກ່າວເປັນເວລາຫຼາຍປີ ພວກເຂົາຈຶ່ງລຶ້ງເຄີຍກັບສິ່ງເຫຼົ່ານັ້ນ ແລະ ບໍ່ພົບເຫັນວ່າສິ່ງເຫຼົ່ານັ້ນແປກ. ດ້ວຍເຫດນັ້ນ, ເຊື້ອພະຍາດພາຍໃນຮ່າງກາຍຂອງພວກເຂົາຈຶ່ງເຕີບໃຫຍ່ ໂດຍກາຍເປັນທຳມະຊາດຂອງພວກເຂົາ ແລະ ທຸກຄົນກໍດຳລົງຊີວິດພາຍໃຕ້ອຳນາດຂອງພວກມັນ. ນີ້ແມ່ນເຫດຜົນທີ່ຜູ້ຄົນແລ່ນໄປມາທົ່ວທຸກບ່ອນຄືກັບມ້າປ່າ. ແຕ່ພວກເຂົາກໍບໍ່ເຄີຍຮັບຮູ້ສິ່ງນີ້ໄດ້ຢ່າງຄົບຖ້ວນ; ພວກເຂົາພຽງແຕ່ງຶກຫົວຂອງພວກເຂົາເພື່ອບົ່ງບອກເຖິງການຍິນຍອມຂອງພວກເຂົາ. ຄວາມຈິງກໍຄື ມະນຸດບໍ່ເອົາໃຈໃສ່ກັບພຣະທຳຂອງເຮົາ. ຖ້າພວກເຂົາຖືເອົາພຣະທຳຂອງເຮົາເປັນການປິ່ນປົວທີ່ດີ ພວກເຂົາກໍຈະ "ເຮັດຕາມຄຳສັ່ງຂອງທ່ານໝໍ" ແລະ ອະນຸຍາດໃຫ້ການປິ່ນປົວນີ້ຮັກສາອາການເຈັບປ່ວຍໃນຕົວພວກເຂົາ. ຢ່າງໃດກໍຕາມ, ໃນໃຈຂອງເຮົາແລ້ວ ວິທີທີ່ພວກເຂົາປະພຶດຕົນແມ່ນບໍ່ສາມາດເຮັດໃຫ້ຄວາມປາຖະໜານີ້ສຳເລັດ ແລະ ດ້ວຍເຫດນັ້ນ ສິ່ງດຽວທີ່ເຮົາສາມາດເຮັດໄດ້ກໍຄື "ກັດລູກປືນ" ແລະ ສືບຕໍ່ກ່າວກັບພວກເຂົາ ເຖິງແມ່ນວ່າພວກເຂົາຈະຟັງ ຫຼື ບໍ່ກໍຕາມ: ເຮົາປະຕິບັດຕາມໜ້າທີ່ຂອງເຮົາເທົ່ານັ້ນ. ມະນຸດບໍ່ເຕັມໃຈຮັບເອົາພອນຂອງເຮົາ ແຕ່ຈະຮັບເອົາຄວາມທໍລະມານຂອງນະຮົກແທນ. ສະນັ້ນ, ສິ່ງດຽວທີ່ເຮົາສາມາດເຮັດໄດ້ກໍຄືຍອມຕາມຄຳຂໍຮ້ອງຂອງພວກເຂົາ. ຢ່າງໃດກໍຕາມ, ເພື່ອວ່າຊື່ຂອງເຮົາ ແລະ ພຣະວິນຍານຂອງເຮົາຈະບໍ່ຖືກເຮັດ

ໃຫ້ອັບອາຍໃນນະຣົກ, ກ່ອນອື່ນໝົດ ເຮົາຈະລົງວິໄນພວກເຂົາ ແລະ ຫຼັງຈາກນັ້ນກໍຈະ "ຍອມ" ຕໍ່ຄວາມປາຖະໜາຂອງພວກເຂົາ ໂດຍເຮັດໃຫ້ພວກເຂົາ "ເຕັມໄປດ້ວຍຄວາມເບີກບານໃຈ". ໃນເວລາໃດກໍຕາມ ຫຼື ໃນສະຖານທີ່ໃດກໍຕາມ ເຮົາບໍ່ເຕັມໃຈທີ່ຈະອະນຸຍາດໃຫ້ມະນຸດເຮັດໃຫ້ເຮົາອັບອາຍໃນຂະນະທີ່ແກວ່ງທຸງຂອງເຮົາ ເຊິ່ງເປັນເຫດຜົນທີ່ເຮົາລົງວິໄນເຂົາຊໍ້າແລ້ວຊໍ້າອີກ. ຖ້າບໍ່ມີການຈຳກັດພຣະວັດຈະນະທີ່ເຄັ່ງຄັດຂອງເຮົາ ແລ້ວມະນຸດຈະສາມາດສືບຕໍ່ຢືນຢູ່ຕໍ່ໜ້າເຮົາຈົນຮອດປັດຈຸບັນນີ້ໄດ້ແນວໃດ? ຜູ້ຄົນບໍ່ຢັບຢັ້ງຈາກບາບພຽງຍ້ອນພວກເຂົາຢ້ານເຮົາຈະຈາກໄປບໍ? ມັນບໍ່ແມ່ນຄວາມຈິງບໍ ທີ່ພວກເຂົາບໍ່ຈົ່ມວ່າພຽງຍ້ອນພວກເຂົາຢ້ານການຂ້ຽນຕີ? ມີຄົນທີ່ໄດ້ເຮັດການຕັດສິນໃຈຢ່າງເດັດຂາດເພື່ອປະໂຫຍດທັງໝົດຂອງແຜນການຂອງເຮົາບໍ? ທຸກຄົນຄິດວ່າແຜນການຂອງເຮົາແມ່ນສັກສິດໂດຍທຳມະຊາດທີ່ຂາດ "ຄຸນນະພາບແຫ່ງສະຕິປັນຍາ" ແຕ່ມີຜູ້ໃດສາມາດເຂົ້າໃຈວ່າ ເຮົາສາມາດເຫັນທະລຸທຸກສິ່ງໃນຄວາມເປັນມະນຸດຂອງເຮົາ? ດັ່ງທີ່ຜູ້ຄົນກ່າວວ່າ "ເປັນຫຍັງຈຶ່ງໃຊ້ຄ້ອນຕີຂະໜາດໃຫຍ່ເພື່ອຕອກຕະປູ?" ມະນຸດ "ຮັກ" ເຮົາ ບໍ່ແມ່ນຍ້ອນຄວາມຮັກຂອງພວກເຂົາທີ່ມີຕໍ່ເຮົານັ້ນ ມີມາແຕ່ເກີດ ແຕ່ຍ້ອນວ່າພວກເຂົາຢ້ານການຂ້ຽນຕີ. ຜູ້ໃດແດ່ໃນທ່າມກາງມະນຸດທີ່ເກີດມາເພື່ອຮັກເຮົາ? ມີຜູ້ໃດແດ່ທີ່ປະຕິບັດກັບເຮົາຄືກັນກັບທີ່ພວກເຂົາປະຕິບັດກັບຫົວໃຈຂອງຕົວເອງ? ສະນັ້ນ, ເຮົາຈຶ່ງສະຫຼຸບສິ່ງນີ້ດ້ວຍສຸພາສິດສຳລັບໂລກມະນຸດວ່າ: ໃນທ່າມກາງມະນຸດ ແມ່ນບໍ່ມີຜູ້ໃດທີ່ຮັກເຮົາ.

ມັນເປັນຍ້ອນວ່າເຮົາປາຖະໜາທີ່ຈະເຮັດພາລະກິດຂອງເຮົາຢູ່ແຜ່ນດິນໂລກໃຫ້ສິ້ນສຸດເທົ່ານັ້ນເຮົາຈຶ່ງໄດ້ເລັ່ງຄວາມໄວຂອງພາລະກິດຂອງເຮົາ ເພື່ອປ້ອງກັນບໍ່ໃຫ້ຜູ້ຄົນຖືກເຮົາໂຍນໄປໄກໆຈົນພວກເຂົາຕົກລົງສູ່ມະຫາສະໝຸດທີ່ບໍ່ມີຂອບເຂດ. ມັນເປັນຍ້ອນວ່າ ເຮົາໄດ້ບອກພວກເຂົາກ່ຽວກັບພື້ນຖານຄວາມຈິງໄວ້ລ່ວງໜ້າ ພວກເຂົາຈຶ່ງຂ້ອນຂ້າງມີຄວາມກຽມພ້ອມເລັກນ້ອຍ. ຖ້າບໍ່ແມ່ນຍ້ອນສິ່ງນີ້ ແລ້ວຈະມີຜູ້ໃດອອກແລ່ນເຮືອໃນສະພາບອາກາດທີ່ພາຍຸໃກ້ຈະມາບໍ? ທຸກຄົນແມ່ນລະມັດລະວັງໃນການເຮັດວຽກ. ໃນຫົວໃຈຂອງພວກເຂົາ ມັນເປັນຄືກັບວ່າ ເຮົາໄດ້ກາຍເປັນໂຈນ. ພວກເຂົາຢ້ານວ່າ ເຮົາຈະຍຶດເອົາທຸກສິ່ງຢູ່ໃນເຮືອນຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງດັນປະຕູຂອງພວກເຂົາດ້ວຍກຳລັງທັງໝົດທີ່ພວກເຂົາສາມາດຮວບຮວມໄດ້ ໂດຍຢ້ານຫຼາຍວ່າ ເຮົາຈະພັງເຂົາໄປຢ່າງກະທັນຫັນ. ເມື່ອເຫັນພວກເຂົາປະພຶດຄືກັບໜູຂີ້ຢ້ານ ເຮົາກໍຈາກໄປຢ່າງງຽບໆ. ໃນຈິນຕະນາການຂອງຜູ້ຄົນ, ມັນເບິ່ງຄືວ່າ ໂລກກຳລັງປະສົບກັບການທຳລາຍລ້າງຄັ້ງສຸດທ້າຍ ແລະດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງພາກັນແລ່ນປົບໜີຢ່າງສັບສົນລະວົນ ແລະ ມີຄວາມຢ້ານກົວຫຼາຍ. ໃນເວລານີ້ເທົ່ານັ້ນ ທີ່ເຮົາໄດ້ເຫັນຜີຍ່າງເລາະໄປທົ່ວທຸກບ່ອນຢູ່ແຜ່ນດິນໂລກ. ເຮົາບໍ່ສາມາດຊ່ວຍຫຍັງໄດ້ນອກຈາກໄດ້ແຕ່ຫົວຂວັນ ແລະ ໃນທ່າມກາງສຽງຫົວຂອງເຮົາ ມະນຸດກໍຕົກໃຈ ແລະ ມີຄວາມຢ້ານ. ພຽງຫຼັງຈາກນັ້ນ ເຮົາຈຶ່ງຮູ້ຄວາມຈິງ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງຢັບຢັ້ງຮອຍຍິ້ມຂອງເຮົາໄວ້ ແລະ ຢຸດເບິ່ງສິ່ງທີ່ກຳລັງເກີດຂຶ້ນຢູ່ແຜ່ນດິນໂລກ ແລະ ໃນທາງກົງກັນຂ້າມ ກໍໄດ້ກັບຄືນໄປປະຕິບັດພາລະກິດຕາມແຜນການດັ່ງເດີມຂອງເຮົາ. ເຮົາບໍ່ຖືເອົາມະນຸດເປັນແບບຢ່າງສຳລັບການຄົ້ນ

ຄວ້າຂອງເຮົາອີກຕໍ່ໄປ ຍ້ອນພວກເຂົາບໍ່ແມ່ນຫຍັງນອກຈາກຂອງເສດເຫຼືອ. ເມື່ອເຮົາຖິ້ມພວກເຂົາ, ພວກເຂົາກໍຈະບໍ່ມີປະໂຫຍດອີກຕໍ່ໄປ. ພວກເຂົາແມ່ນເສດຂີ້ເຫຍື່ອ. ໃນຕອນນີ້ ເຮົາຈະກວາດລ້າງພວກເຂົາ ແລະ ຖິ້ມພວກເຂົາໃສ່ໃນກອງໄຟ. ໃນຈິດໃຈຂອງມະນຸດ, ຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາແມ່ນມີຢູ່ພາຍໃນການພິພາກສາ, ຄວາມຍິ່ງໃຫຍ່ ແລະ ຄວາມໂກດຮ້າຍຂອງເຮົາ. ແຕ່ພວກເຂົາບໍ່ຮູ້ເລີຍວ່າ ເຮົາບໍ່ສົນໃຈຄວາມອ່ອນແອຂອງພວກເຂົາແຕ່ດົນນານແລ້ວ ແລະ ເຮົາໄດ້ຖອນຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາແຕ່ດົນນານແລ້ວ ແລະ ນັ້ນແມ່ນເຫດຜົນທີ່ພວກເຂົາຢູ່ໃນສະພາບປັດຈຸບັນຂອງພວກເຂົາ. ບໍ່ມີຜູ້ໃດສາມາດຮູ້ຈັກເຮົາ ແລະ ພວກເຂົາບໍ່ສາມາດເຂົ້າໃຈພຣະທຳຂອງເຮົາ ຫຼື ເຫັນໜ້າເຮົາ ຫຼື ເຂົ້າໃຈຄວາມປະສົງຂອງເຮົາໄດ້. ສິ່ງເຫຼົ່ານີ້ບໍ່ແມ່ນສະພາບປັດຈຸບັນຂອງມະນຸດບໍ? ແລ້ວສາມາດເວົ້າໄດ້ແນວໃດວ່າ ເຮົາມີຄວາມເມດຕາ ແລະ ຄວາມກະລຸນາ? ເຮົາບໍ່ຮັບພິຈາລະນາຄວາມອ່ອນແອຂອງມະນຸດ ແລະ ເຮົາບໍ່ "ເບິ່ງແຍງ" ຄວາມບໍ່ພຽງພໍຂອງພວກເຂົາ. ສິ່ງນີ້ຍັງສາມາດເປັນຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາບໍ? ຫຼື ສິ່ງນີ້ຍັງສາມາດເປັນຄວາມຮັກຂອງເຮົາທີ່ມີຕໍ່ມວນມະນຸດບໍ? ທຸກຄົນຄິດວ່າ ເຮົາກຳລັງກ່າວ "ຄຳຕະຫຼົກທີ່ວ່າງເປົ່າ" ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ເຊື່ອພຣະທຳທີ່ເຮົາກ່າວ. ແຕ່ມີຜູ້ໃດທີ່ຮູ້ຈັກສິ່ງນີ້ບໍ ເຊັ່ນ: "ນີ້ແມ່ນຍຸກທີ່ແຕກຕ່າງ, ຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາແມ່ນບໍ່ໄດ້ມີຢູ່ໃນຍຸກປັດຈຸບັນ; ແຕ່ເຖິງຢ່າງໃດກໍຕາມ, ເຮົາແມ່ນພຣະເຈົ້າຕະຫຼອດໄປ ຜູ້ທີ່ເຮັດຕາມຄຳກ່າວທີ່ພຣະອົງກ່າວ"? ເມື່ອເຮົາຢູ່ໃນທ່າມກາງມະນຸດ ຜູ້ຄົນກໍເຫັນເຮົາໃນຄວາມຄິດຂອງພວກເຂົາວ່າເປັນຜູ້ທີ່ສູງສົ່ງທີ່ສຸດ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງເຊື່ອວ່າ ເຮົາມັກທີ່ຈະກ່າວຈາກພາຍໃນສະຕິປັນຍາຂອງເຮົາ. ສິ່ງນີ້ເຮັດໃຫ້ພວກເຂົາຮັບເອົາພຣະທຳຂອງເຮົາດ້ວຍຄວາມລະມັດລະວັງສະເໝີ. ແຕ່ມີຜູ້ໃດແດ່ທີ່ສາມາດເຂົ້າໃຈກົດເກນທີ່ຢູ່ເບື້ອງຫຼັງຂອງການກ່າວຂອງເຮົາ? ຫຼື ຕົ້ນກຳເນີດຂອງພຣະທຳຂອງເຮົາ? ມີຜູ້ໃດແດ່ທີ່ສາມາດຢັ່ງເຖິງສິ່ງທີ່ເຮົາປາຖະໜາຈະບັນລຸຢ່າງແທ້ຈິງ? ຫຼື ມີຜູ້ໃດແດ່ທີ່ສາມາດເຈາະເລິກລາຍລະອຽດຂອງການສະຫຼຸບແຜນການຄຸ້ມຄອງຂອງເຮົາ? ຜູ້ໃດສາມາດເປັນຜູ້ທີ່ໄດ້ຮັບຄວາມໄວ້ວາງໃຈຈາກເຮົາ? ໃນທ່າມກາງທຸກສິ່ງ, ນອກຈາກເຮົາແລ້ວ ມີຜູ້ໃດທີ່ສາມາດຮູ້ຈັກເຖິງສິ່ງທີ່ເຮົາກຳລັງປະຕິບັດຢ່າງແທ້ຈິງບໍ່? ແລ້ວຜູ້ໃດສາມາດຮູ້ຈັກຈຸດປະສົງສຸດທ້າຍຂອງເຮົາບໍ່?

ວັນທີ 30 ເມສາ 1992

# ບົດທີ 39

ໃນແຕ່ລະມື້ ເຮົາເຄື່ອນໄຫວເໜືອຈັກກະວານ, ສັງເກດສິ່ງທັງປວງທີ່ສ້າງຂຶ້ນໂດຍມືຂອງເຮົາ. ທີ່ພັກຜ່ອນຂອງເຮົາແມ່ນຢູ່ເທິງສະຫວັນ ແລະ ຂ້າງລຸ່ມແມ່ນດິນແດນທີ່ເຮົາເຄື່ອນໄຫວໄປມາ. ເຮົາປົກຄອງທຸກສິ່ງໃນທ່າມກາງສິ່ງທັງປວງ, ເຮົາບັນຊາທຸກສິ່ງໃນທ່າມກາງສິ່ງທັງປວງ, ເຮັດໃຫ້ທຸກສິ່ງທີ່ມີຢູ່ນັ້ນປະຕິບັດຕາມກົດເກນທຳມະຊາດ ແລະ ຢູ່ພາຍໃຕ້ຄຳສັ່ງຂອງທຳມະຊາດ. ເພາະເຮົາລັງກຽດຄົນທີ່ບໍ່ເຊື່ອຟັງ ແລະ ລັງກຽດຄົນທີ່ຕໍ່ຕ້ານເຮົາ ແລະ ບໍ່ຍອມຢູ່ໃນໝວດຂອງຕົວເອງ, ເຮົາຈະເຮັດໃຫ້ທຸກສິ່ງຍອມຕໍ່ການຈັດແຈງຂອງເຮົາ ໂດຍບໍ່ມີການຕໍ່ຕ້ານ, ເຮົາຈະເຮັດໃຫ້ທຸກສິ່ງຂ້າງເທິງ ແລະ ພາຍໃນຈັກກະວານມີລະບຽບ. ຜູ້ໃດແດ່ຍັງກ້າຕໍ່ຕ້ານເຮົາຢ່າງຕາມໃຈ? ຜູ້ໃດກ້າບໍ່ເຊື່ອຟັງການຈັດແຈງໂດຍມືຂອງເຮົາບໍ? ມະນຸດຈະມີ "ຄວາມສົນໃຈ" ກະບົດຕໍ່ເຮົາໄດ້ແນວໃດ? ເຮົາຈະນຳຜູ້ຄົນມາຢູ່ຕໍ່ໜ້າ "ບັນພະບຸລຸດ" ຂອງພວກເຂົາ, ຈະເຮັດໃຫ້ບັນພະບຸລຸດຂອງພວກເຂົານຳພາພວກເຂົາຄືນສູ່ຄອບຄົວຂອງພວກເຂົາ ແລະ ພວກເຂົາຈະບໍ່ໄດ້ຮັບອະນຸຍາດໃຫ້ກະບົດຕໍ່ບັນພະບຸລຸດຂອງພວກເຂົາ ແລະ ກັບຄືນມາຢູ່ຂ້າງເຮົາ. ສິ່ງດັ່ງກ່າວແມ່ນແຜນການຂອງເຮົາ. ໃນປັດຈຸບັນ, ພຣະວິນຍານຂອງເຮົາເຄື່ອນໄຫວທົ່ວແຜ່ນດິນໂລກ, ກຳນົດຕົວເລກໃຫ້ກັບຜູ້ຄົນທຸກປະເພດ, ເຮັດເຄື່ອງໝາຍທີ່ແຕກຕ່າງກັນກັບຄົນທຸກປະເພດ, ເພື່ອວ່າບັນພະບຸລຸດຂອງພວກເຂົາຈະສາມາດນຳພາພວກເຂົາກັບຄືນສູ່ຄອບຄົວຂອງພວກເຂົາໄດ້ຢ່າງສຳເລັດ ແລະ ເຮົາຈະບໍ່ຈຳເປັນຕ້ອງສືບຕໍ່ "ກັງວົນ" ກ່ຽວກັບພວກເຂົາ ເຊິ່ງເປັນສິ່ງທີ່ໜ້າລຳຄານທີ່ສຸດ; ສະນັ້ນ ເຮົາຍັງຈະແບ່ງວຽກງານ ແລະ ປະທານຄວາມພະຍາຍາມໃຫ້ອີກດ້ວຍ. ນີ້ແມ່ນສ່ວນໜຶ່ງຂອງແຜນການຂອງເຮົາ ແລະ ບໍ່ສາມາດຖືກຂັດຂວາງໂດຍມະນຸດຄົນໃດໄດ້. ເຮົາຈະເລືອກຕົວແທນທີ່ເໝາະສົມຈາກທຸກສິ່ງທີ່ມີຢູ່ເພື່ອຄຸ້ມຄອງສິ່ງທັງປວງ, ເຮັດໃຫ້ເກີດການຍອມຮັບຢ່າງເປັນລະບົບລະບຽບຂອງທຸກສິ່ງຕໍ່ໜ້າເຮົາ. ເຮົາພະເນຈອນຢູ່ເທິງສະຫວັນຢູ່ເລື້ອຍໆ ແລະ ຍ່າງຢູ່ລຸ່ມສະຫວັນສະເໝີ. ເມື່ອໄດ້ເຫັນແຜ່ນດິນໂລກອັນກວ້າງໃຫຍ່ທີ່ມີຜູ້ຄົນມາໄປ, ສັງເກດເຫັນມະນຸດຊາດບຽດບຽນກັນຢ່າງໜາແໜ້ນເທິງແຜ່ນດິນໂລກ ແລະ ເຫັນຝູງນົກ ແລະ ສັດເດຍລະສານທີ່ອາໄສຢູ່ແຜ່ນດິນໂລກ, ເຮົາບໍ່ສາມາດເຮັດຫຍັງໄດ້ ນອກຈາກຮູ້ສຶກເສົ້າໃຈ. ໃນເວລາແຫ່ງການເນລະມິດສ້າງ, ຍ້ອນເຮົາສ້າງທຸກສິ່ງຂຶ້ນ ແລະ ທຸກສິ່ງລ້ວນແລ້ວແຕ່ປະຕິບັດໜ້າທີ່ໃນຕຳແໜ່ງຂອງໃຜມັນພາຍໃຕ້ການຈັດແຈງຂອງເຮົາ, ເຮົາຫົວຈາກເບື້ອງເທິງ ແລະ ເມື່ອທຸກສິ່ງທີ່ຢູ່ພາຍໃຕ້ສະຫວັນໄດ້ຍິນສຽງຫົວຂອງເຮົາ, ພວກເຂົາກໍຖືກດົນບັນດານທັນທີ, ຍ້ອນໃນຊ່ວງເວລານີ້ ກິດຈະການທີ່ຍິ່ງໃຫຍ່ຂອງເຮົາຖືກເຮັດໃຫ້ສຳເລັດແລ້ວ. ເຮົາເພີ່ມສະຕິປັນຍາຂອງສະຫວັນເຂົ້າໃນມະນຸດ, ເຮັດໃຫ້ເຂົາເປັນຕົວແທນໃຫ້ກັບເຮົາທ່າມກາງສິ່ງທັງປວງ, ຍ້ອນເຮົາສ້າງມະນຸດເພື່ອໃຫ້ເຂົາເປັນຕົວແທນຂອງເຮົາ, ບໍ່ແມ່ນບໍ່ເຊື່ອຟັງເຮົາ ແຕ່ສັນລະເສີນເຮົາໃນສ່ວນເລິກຂອງຫົວໃຈຂອງເຂົາ. ແລ້ວຜູ້ໃດຈະສາມາດເຮັດໃຫ້ພຣະທຳທີ່ງ່າຍດາຍເຫຼົ່ານີ້ສຳເລັດໄດ້? ເປັນຫຍັງມະນຸດຈຶ່ງເກັບຫົວໃຈຂອງເຂົາໄວ້ສຳລັບຕົວເຂົາເອງຢູ່ສະເໝີ? ຫົວໃຈຂອງເຂົາບໍ່ແມ່ນເພື່ອເຮົາບໍ? ບໍ່ແມ່ນວ່າເຮົາຮຽກຮ້ອງຈາກມະນຸດ

ໂດຍບໍ່ມີເງື່ອນໄຂ, ແຕ່ເຂົາເປັນຂອງເຮົາຢູ່ຕະຫຼອດເວລາ. ເຮົາຈະມອບສິ່ງທີ່ເປັນຂອງເຮົາໃຫ້ກັບຄົນອື່ນເສີຍໆໄດ້ແນວໃດ? ເຮົາຈະມອບ “ເຄື່ອງນຸ່ງ” ທີ່ເຮົາສ້າງຂຶ້ນມາໃຫ້ຄົນອື່ນສວມໃສ່ໄດ້ແນວໃດ? ໃນສາຍຕາຂອງຜູ້ຄົນ, ມັນເປັນຄືກັບວ່າເຮົາເປັນບ້າໄປແລ້ວ, ເປັນຄົນປ່ວຍທາງຈິດ ແລະ ບໍ່ເຂົ້າໃຈຫຍັງເລີຍກ່ຽວກັບວິທີທາງຂອງມະນຸດ, ມັນເປັນຄືກັບວ່າເຮົາປັນຍາອ່ອນ. ດ້ວຍເຫດນັ້ນ ຜູ້ຄົນຈຶ່ງຫຼຽວເບິ່ງເຮົາວ່າເປັນຄົນໂງ່ສະເໝີ ແລະ ພວກເຂົາບໍ່ເຄີຍຮັກເຮົາຢ່າງແທ້ຈິງເລີຍ. ຍ້ອນທຸກສິ່ງທີ່ມະນຸດເຮັດແມ່ນເພື່ອລໍ້ລວງເຮົາ, ເຮົາຈຶ່ງທຳລາຍມະນຸດຊາດທັງປວງດ້ວຍອາລົມທີ່ໂກດຮ້າຍ. ໃນບັນດາທຸກສິ່ງທີ່ເຮົາໄດ້ສ້າງຂຶ້ນ, ມີພຽງແຕ່ມະນຸດຊາດທີ່ພະຍາຍາມຊອກຫາວິທີເພື່ອຫຼອກລວງເຮົາຢູ່ສະເໝີ ແລະ ມັນເປັນຍ້ອນສິ່ງນີ້ເທົ່ານັ້ນ ເຮົາຈຶ່ງເວົ້າວ່າ ມະນຸດເປັນ “ຜູ້ປົກຄອງ” ສິ່ງທັງປວງ.

ໃນປັດຈຸບັນ ເຮົາໄດ້ໂຍນທຸກຄົນສູ່ “ເຕົາຫຼໍ່ໃຫຍ່” ເພື່ອຖືກຫຼໍ່ຫຼອມ. ເຮົາຢືນຂຶ້ນສູງ ແລະ ຫຼຽວເບິ່ງຢ່າງໃກ້ຊິດ ໃນຂະນະທີ່ພວກເຂົາເຜົາໄໝ້ໃນໄຟ ແລະ ເມື່ອຖືກບີບບັງຄັບດ້ວຍແປວໄຟ ຜູ້ຄົນກໍຄາຍຄວາມຈິງອອກມາ. ນີ້ແມ່ນໜຶ່ງໃນວິທີການທີ່ເຮົາປະຕິບັດພາລະກິດ. ຖ້າມັນບໍ່ເປັນແບບນັ້ນ, ຜູ້ຄົນຈະກ່າວອ້າງວ່າຕົນເອງ “ຖ່ອມຕົວ” ແລະ ບໍ່ມີໃຜເຕັມໃຈທີ່ຈະເປັນຄົນທຳອິດເປີດປາກຂອງພວກເຂົາເພື່ອເວົ້າເຖິງປະສົບການຂອງພວກເຂົາເອງ, ທຸກຄົນແມ່ນໄດ້ແຕ່ຫຼຽວເບິ່ງໜ້າກັນ. ນີ້ແມ່ນແກ້ວຜະລຶກແຫ່ງສະຕິປັນຍາຂອງເຮົາແທ້ຈິງ, ຍ້ອນເຮົາໄດ້ກຳນົດບັນຫາຂອງປັດຈຸບັນກ່ອນຍຸກຕ່າງໆແລ້ວ. ສະນັ້ນ ຜູ້ຄົນຈຶ່ງເຂົ້າສູ່ເຕົາຫຼໍ່ໂດຍບໍ່ຮູ້ຕົວ ຄືກັບວ່າ ພວກເຂົາຖືກຈູງດ້ວຍເຊືອກ, ຄືກັບວ່າພວກເຂົາເລີ່ມມຶນຊາ. ບໍ່ມີໃຜສາມາດຫຼົບໜີຈາກການໂຈມຕີຂອງແປວໄຟ, ພວກເຂົາ “ໂຈມຕີ” ກັນເອງ, ພວກເຂົາ “ແລ່ນໄປມາດ້ວຍຄວາມຍິນດີ”, ຍັງກັງວົນໃຈກ່ຽວກັບໂຊກຊະຕາຂອງພວກເຂົາທີ່ຢູ່ໃນເຕົາຫຼໍ່ ໂດຍຢ້ານຢ່າງເລິກໆວ່າພວກເຂົາຈະຖືກເຜົາໄໝ້ຈົນຕາຍ. ເມື່ອເຮົາກໍ່ໄຟ, ມັນກໍລຸກໄໝ້ທັນທີ, ພຸ່ງຂຶ້ນສູ່ທ້ອງຟ້າ ແລະ ແປວໄຟກໍເກາະເສື້ອຄຸມຂອງເຮົາຢູ່ເລື້ອຍໆ ຄືກັບວ່າ ພະຍາຍາມດຶງມັນເຂົ້າສູ່ເຕົາຫຼໍ່. ຜູ້ຄົນຈ້ອງຕາເບິ່ງເຮົາ. ທັນທີທັນໃດ, ເຮົາກໍຕິດຕາມໄຟໄປສູ່ເຕົາຫຼໍ່ ແລະ ໃນຊ່ວງເວລານີ້ແປວໄຟກໍລຸກໄໝ້ ແລະ ຜູ້ຄົນກໍຮ້ອງອອກມາ. ເຮົາຍ່າງໄປມາທ່າມກາງແປວໄຟ. ແປວໄຟຮ້ອນຫຼາຍ, ແຕ່ພວກມັນບໍ່ໄດ້ມີເຈດຕະນາທີ່ຈະທຳຮ້າຍເຮົາ ແລະ ເຮົາມອບເສື້ອຄຸມຂອງເຮົາທີ່ຄຸມຮ່າງກາຍຂອງເຮົາໃຫ້ກັບແປວໄຟອີກຄັ້ງໜຶ່ງ, ແຕ່ມັນກໍຢູ່ຫ່າງຈາກເຮົາ. ເມື່ອນັ້ນ ຜູ້ຄົນຈຶ່ງຈະເຫັນໃບໜ້າທີ່ແທ້ຈິງຂອງເຮົາຢ່າງຊັດເຈນ ຍ້ອນແສງແປວໄຟນັ້ນ. ເພາະພວກເຂົາຢູ່ທ່າມກາງການເຜົາໄໝ້ຂອງເຕົາໄຟ, ພວກເຂົາຈຶ່ງໜີໄປທົ່ວສາລະທິດ ຍ້ອນໃບໜ້າຂອງເຮົາ ແລະ ເຕົາຫຼໍ່ໄດ້ເລີ່ມ “ຟົດ” ຂຶ້ນ. ທຸກຄົນທີ່ຢູ່ໃນແປວໄຟໄດ້ເຫັນເຖິງບຸດມະນຸດ ຜູ້ທີ່ຖືກຫຼໍ່ຫຼອມໃນແປວໄຟ. ເຖິງແມ່ນເສື້ອຜ້າເທິງຮ່າງກາຍຂອງພຣະອົງນັ້ນທຳມະດາ, ພວກມັນກໍມາຈາກຄວາມສວຍງາມທີ່ສຸດ; ເຖິງແມ່ນເກີບທີ່ຢູ່ໃນຕີນຂອງພຣະອົງບໍ່ໄດ້ພິເສດຫຍັງ, ພວກມັນກໍເຮັດໃຫ້ເກີດຄວາມອິດສາຫຼາຍ; ແສງໄຟໄໝ້ເປັ່ງປະກາຍອອກຈາກໃບໜ້າຂອງພຣະອົງ, ຕາຂອງພຣະອົງເຫຼື້ອມຍິບໆ ແລະ ມັນເບິ່ງຄືກັບວ່າ ເປັນຍ້ອນແສງສະຫວ່າງທີ່ຢູ່ຕາຂອງພຣະອົງ, ຜູ້ຄົນຈຶ່ງໄດ້ເຫັນໃບໜ້າທີ່ແທ້ຈິງຂອງພຣະອົງຢ່າງຊັດເຈນ. ຜູ້ຄົນຕົກໃຈຢ້ານ ແລະ ພວກເຂົາເຫັນເສື້ອຜ້າສີຂາວທີ່ປົກຄຸມຮ່າງກາຍຂອງພຣະອົງ ແລະ ຜົມຂອງພຣະອົງ ຂາວຄືກັບ

ຂົນແກະທີ່ຍາວລົງສູ່ບ່າໄຫຼ່ຂອງພຣະອົງ. ໂດຍສະເພາະແລ້ວ ສາຍຮັດສີທອງທີ່ອ້ອມເອິກຂອງພຣະອົງສະທ້ອນແສງສະຫວ່າງຈົນເຫຼື້ອມຕາ, ໃນຂະນະທີ່ເກີບຢູ່ໃນຕີນຂອງພຣະອົງກໍຍິ່ງໜ້າປະທັບໃຈ. ຍ້ອນເກີບທີ່ບຸກຄົນມະນຸດສວມໃສ່ນັ້ນຍັງຢູ່ທ່າມກາງແປວໄຟ, ຜູ້ຄົນຈຶ່ງເຊື່ອວ່າພວກມັນເປັນສິ່ງທີ່ມະຫັດສະຈັນ. ພຽງແຕ່ເມື່ອມີການຮ້ອງເຈັບປວດຂຶ້ນ, ຜູ້ຄົນຈຶ່ງໄດ້ເຫັນປາກຂອງບຸກຄົນມະນຸດ. ເຖິງແມ່ນພວກເຂົາຢູ່ທ່າມກາງການຫຼໍ່ຫຼອມແຫ່ງໄຟ, ພວກເຂົາກໍບໍ່ເຂົ້າໃຈພຣະທຳໃດໆຈາກປາກຂອງບຸກຄົນມະນຸດ ແລະ ດ້ວຍເຫດນັ້ນ ໃນຊ່ວງເວລານີ້ ພວກເຂົາຈຶ່ງບໍ່ໄດ້ຍິນສຽງອ່ອນຫວານຂອງບຸກຄົນມະນຸດ, ແຕ່ເຫັນດາບແຫຼມຄົມທີ່ຢູ່ພາຍໃນປາກຂອງພຣະອົງ ແລະ ພຣະອົງກໍບໍ່ເວົ້າຫຍັງອີກ, ແຕ່ດາບຂອງພຣະອົງໄດ້ເຮັດໃຫ້ມະນຸດເຈັບປວດ. ອ້ອມລ້ອມໄປດ້ວຍແປວໄຟ, ຜູ້ຄົນທົນທຸກກັບຄວາມເຈັບປວດ. ຍ້ອນຄວາມຢາກຮູ້ຢາກເຫັນຂອງພວກເຂົາ, ພວກເຂົາຈຶ່ງສືບຕໍ່ເບິ່ງການປາກົດຕົວຢ່າງເໜືອທຳມະຊາດຂອງບຸກຄົນມະນຸດ ແລະ ພຽງແຕ່ໃນຊ່ວງເວລານີ້ ພວກເຂົາຈຶ່ງຄົ້ນພົບວ່າ ດາວເຈັດດວງທີ່ຢູ່ໃນມືຂອງພຣະອົງນັ້ນໄດ້ຫາຍໄປແລ້ວ. ຍ້ອນບຸກຄົນມະນຸດຢູ່ໃນເຕົາຫຼໍ່ ແລະ ບໍ່ໄດ້ຢູ່ເທິງແຜ່ນດິນໂລກ, ດາວເຈັດດວງທີ່ຢູ່ໃນມືຂອງພຣະອົງຈຶ່ງຖືກຮັບເອົາໄປ, ນັ້ນກໍຍ້ອນວ່າ ພວກມັນເປັນພຽງການອຸປະມາ. ໃນຊ່ວງເວລານີ້, ພວກມັນບໍ່ຖືກກ່າວເຖິງອີກຕໍ່ໄປ, ແຕ່ຖືກກຳນົດໃຫ້ຢູ່ໃນສ່ວນຕ່າງໆຂອງບຸກຄົນມະນຸດ. ໃນຄວາມຊົງຈຳຂອງຜູ້ຄົນ, ດາວເຈັດດວງເຮັດໃຫ້ເຂົາບໍ່ສະບາຍໃຈ. ໃນປັດຈຸບັນ, ເຮົາບໍ່ເຮັດສິ່ງຕ່າງໆໃຫ້ຫຍຸ້ງຍາກສຳລັບມະນຸດອີກຕໍ່ໄປ, ເຮົານຳເອົາດາວເຈັດດວງໄປຈາກບຸກຄົນມະນຸດ ແລະ ໂຮມທຸກສ່ວນຂອງບຸກຄົນມະນຸດໃຫ້ກາຍເປັນໜຶ່ງ. ມີພຽງແຕ່ໃນຊ່ວງເວລານີ້ເທົ່ານັ້ນ ມະນຸດຈຶ່ງເຫັນເຖິງການປາກົດຕົວທັງໝົດຂອງເຮົາ. ຜູ້ຄົນຈະບໍ່ແຍກພຣະວິນຍານຂອງເຮົາອອກຈາກເນື້ອໜັງຂອງເຮົາອີກຕໍ່ໄປ, ຍ້ອນເຮົາໄດ້ອອກຈາກແຜ່ນດິນໂລກຂຶ້ນສູ່ທີ່ສູງແລ້ວ. ຜູ້ຄົນໄດ້ເຫັນເຖິງໃບໜ້າທີ່ແທ້ຈິງຂອງເຮົາ, ພວກເຂົາບໍ່ເຮັດໃຫ້ເຮົາແຕກທັກອີກຕໍ່ໄປ ແລະ ເຮົາກໍບໍ່ທົນທຸກກັບການປະນາມຂອງມະນຸດອີກຕໍ່ໄປ. ຍ້ອນເຮົາຍ່າງເຂົ້າສູ່ເຕົາຫຼໍ່ໃຫຍ່ຄຽງຂ້າງກັບມະນຸດ, ເຂົາຈຶ່ງຍັງຕ້ອງໄດ້ເພິ່ງພາເຮົາ, ໃນຄວາມສຳນຶກຂອງເຂົາ, ເຂົາຮູ້ສຶກເຖິງການເປັນຢູ່ຂອງເຮົາ. ສະນັ້ນ ທຸກສິ່ງທີ່ເປັນທອງຄຳບໍລິສຸດຈຶ່ງໄດ້ໂຮມຢູ່ກັບເຮົາໃນທ່າມກາງການເຜົາໄໝ້ຂອງໄຟ ເຊິ່ງເປັນຊ່ວງເວລາທີ່ແຕ່ລະຄົນຖືກຈັດແບ່ງຕາມປະເພດຂອງໃຜລາວ. ເຮົາຈັດແບ່ງ “ໂລຫະ” ແຕ່ລະປະເພດ, ເຮັດໃຫ້ພວກມັນທັງໝົດກັບຄືນສູ່ຄອບຄົວຂອງພວກມັນ ແລະ ມີແຕ່ໃນຕອນນີ້ ທຸກສິ່ງຈຶ່ງເລີ່ມຟື້ນຄືນອີກຄັ້ງ...

ມັນເປັນຍ້ອນມະນຸດມີມົນທິນຫຼາຍ ເຮົາຈຶ່ງໂຍນເຂົາເຂົ້າສູ່ເຕົາຫຼໍ່ເພື່ອໃຫ້ຖືກເຜົາໄໝ້. ແຕ່ເຂົາກໍບໍ່ໄດ້ຖືກທຳລາຍໂດຍແປວໄຟ, ແຕ່ຖືກຫຼໍ່ຫຼອມ ເຮົາຈຶ່ງພໍໃຈໃນຕົວເຂົາ, ຍ້ອນສິ່ງທີ່ເຮົາຕ້ອງການແມ່ນມາຈາກທອງຄຳບໍລິສຸດ ໂດຍບໍ່ມີສິ່ງເຈືອປົນ, ບໍ່ແມ່ນສິ່ງທີ່ສົກກະປົກ ແລະ ເປິເປື້ອນ. ຜູ້ຄົນບໍ່ເຂົ້າໃຈຄວາມຮູ້ສຶກຂອງເຮົາ, ສະນັ້ນກ່ອນທີ່ຈະປີນຂຶ້ນ “ໂຕະຜ່າຕັດ” ພວກເຂົາກໍເຕັມໄປດ້ວຍຄວາມວິຕົກກັງວົນ, ຄືກັບວ່າ ຫຼັງຈາກທີ່ໄດ້ຜ່າຕັດພວກເຂົາແລ້ວ ເຮົາຈະສັງຫານພວກເຂົາຢູ່ທີ່ນັ້ນ ແລະ ແລ້ວພວກເຂົາກໍຈະນອນຕາຍຢູ່ເທິງໂຕະຜ່າຕັດ. ເຮົາເຂົ້າໃຈຄວາມຮູ້ສຶກຂອງຜູ້ຄົນ ແລະ ສະນັ້ນ ເຮົາຈຶ່ງເບິ່ງຄືກັບວ່າເປັນສະມາຊິກຂອງມະນຸດຊາດ. ເຮົາເຫັນໃຈ “ຄວາມໂຊກຮ້າຍ” ຂອງມະນຸດຫຼາຍ

ແລະ ເຮົາບໍ່ຮູ້ວ່າເປັນຫຍັງມະນຸດຈຶ່ງ "ລົ້ມປ່ວຍ". ຖ້າເຂົາສຸຂະພາບດີ ແລະ ບໍ່ມີຄວາມຜິດປົກກະຕິ, ຈຳເປັນຫຍັງທີ່ຈະຕ້ອງຈ່າຍລາຄາ ແລະ ໃຊ້ເວລາຢູ່ເທິງໂຕະຜ່າຕັດ? ແຕ່ຄວາມຈິງບໍ່ສາມາດຖອນຄືນໄດ້, ຜູ້ໃດບອກໃຫ້ມະນຸດບໍ່ສົນໃຈ "ການອະນາໄມອາຫານ"? ຜູ້ໃດບອກເຂົາບໍ່ໃຫ້ສົນໃຈກັບການມີສຸຂະພາບທີ່ດີ? ໃນປັດຈຸບັນ, ເຮົາມີທາງອື່ນເລືອກຢູ່ບໍ? ເພື່ອສະແດງຄວາມເຫັນໃຈຂອງເຮົາສຳລັບມະນຸດ, ເຮົາຈຶ່ງເຂົ້າສູ່ "ຫ້ອງຜ່າຕັດ" ພ້ອມກັບເຂົາ ແລະ ຜູ້ໃດບອກເຮົາໃຫ້ຮັກມະນຸດ? ສະນັ້ນ ເຮົາຈຶ່ງຈັບ "ມີດຜ່າຕັດ" ດ້ວຍຕົນເອງ ແລະ ເລີ່ມ "ຜ່າຕັດ" ມະນຸດເພື່ອປ້ອງກັນຜົນທີ່ຈະຕາມມາ. ຍ້ອນຄວາມຊື່ສັດຂອງເຮົາຕໍ່ມະນຸດ, ຜູ້ຄົນຮ້ອງໄຫ້ທ່າມກາງຄວາມເຈັບປວດເພື່ອສະແດງຄວາມກະຕັນຍູຕໍ່ເຮົາ. ຜູ້ຄົນເຊື່ອວ່າ ເຮົາໃຫ້ຄຸນຄ່າກັບຄວາມຊອບທຳ, ເຮົາຈະຍື່ນມືຊ່ວຍເຫຼືອ ເມື່ອ "ໝູ່ເພື່ອນ" ຂອງເຮົາລຳບາກ ແລະ ຜູ້ຄົນຍິ່ງຕື່ນຕັນໃຈກັບຄວາມເມດຕາຂອງເຮົາ ແລະ ເວົ້າວ່າ ພວກເຂົາຈະສົ່ງ "ຂອງຂວັນ" ໃຫ້ກັບເຮົາ ເມື່ອຄວາມເຈັບປ່ວຍຖືກປິ່ນປົວແລ້ວ, ແຕ່ເຮົາບໍ່ໄດ້ສົນໃຈຕໍ່ການສະແດງອອກເຖິງຄວາມຕັ້ງໃຈເຊັ່ນນັ້ນ ແລະ ກົງກັນຂ້າມ ເຮົາຕັ້ງໃຈໃສ່ແຕ່ການຜ່າຕັດມະນຸດ. ຍ້ອນຄວາມອ່ອນແອທາງຮ່າງກາຍຂອງມະນຸດ, ພາຍໃຕ້ຜົນຂອງມີດ ເຂົາຈຶ່ງຫຼັບຕາຂອງເຂົາຊະນິດ ແລະ ນອນຕົກໃຈຢູ່ເທິງໂຕະຜ່າຕັດ, ແຕ່ເຮົາກໍບໍ່ສົນໃຈ, ເຮົາສືບຕໍ່ປະຕິບັດພາລະກິດທີ່ຢູ່ໃນມືຂອງເຮົາ. ເມື່ອການຜ່າຕັດສຳເລັດລົງ, ຜູ້ຄົນກໍຫຼຸດພົ້ນອອກຈາກ "ຄາງເສືອ" ແລະ ເຮົາບຳລຸງພວກເຂົາດ້ວຍສານອາຫານທີ່ອຸດົມສົມບູນ ແລະ ເຖິງແມ່ນວ່າ ພວກເຂົາຈະບໍ່ຮູ້ຈັກ, ສານອາຫານທີ່ຢູ່ພາຍໃນພວກເຂົາກໍເພີ່ມຂຶ້ນເທື່ອລະໜ້ອຍ. ແລ້ວເຮົາກໍຍິ້ມໃຫ້ກັບພວກເຂົາ ແລະ ພວກເຂົາກໍໄດ້ເຫັນໃບໜ້າທີ່ແທ້ຈິງຂອງເຮົາຢ່າງຊັດເຈນ ຫຼັງຈາກທີ່ພວກເຂົາໄດ້ຟື້ນຟູສຸຂະພາບຂອງພວກເຂົາ ແລະ ດ້ວຍເຫດນັ້ນພວກເຂົາຈຶ່ງຮັກເຮົາຫຼາຍຍິ່ງຂຶ້ນ, ພວກເຂົາຮັບເອົາເຮົາເປັນບິດາຂອງພວກເຂົາ ແລະ ນີ້ບໍ່ແມ່ນຄວາມເຊື່ອມໂຍງລະຫວ່າງສະຫວັນ ແລະ ແຜ່ນດິນໂລກບໍ?

ວັນທີ 4 ພຶດສະພາ 1992

# ບົດທີ 40

ຜູ້ຄົນຈ້ອງເບິ່ງທຸກການເຄື່ອນໄຫວຂອງເຮົາ ຄືກັບວ່າເຮົາກຳລັງຈະນຳສະຫວັນລົງມາ ແລະ ພວກເຂົາກໍສັບສົນຍ້ອນການກະທຳຂອງເຮົາຢູ່ສະເໝີ ຄືກັບວ່າການກະທຳຂອງເຮົາບໍ່ສາມາດຢັ່ງເຖິງໂດຍພວກເຂົາແທ້ໆ. ສະນັ້ນ ພວກເຂົາຈຶ່ງຮັບເອົາຄຳແນະນຳຈາກເຮົາໃນທຸກສິ່ງທີ່ພວກເຂົາເຮັດ ໂດຍຢ້ານວ່າພວກເຂົາຈະຝ່າຝືນສະຫວັນ ແລະ ຖືກໂຍນສູ່ "ໂລກມະນຸດ". ເຮົາບໍ່ໄດ້ພະຍາຍາມຄົ້ນຫາສິ່ງໃດທີ່ເຮົາສາມາດໃຊ້ຕໍ່ຜູ້ຄົນ ຫຼື ເຮັດໃຫ້ຄວາມບົກຜ່ອງຂອງພວກເຂົາເປັນເປົ້າໝາຍຂອງພາລະກິດຂອງເຮົາ. ໃນຊ່ວງເວລານີ້, ພວກເຂົາມີຄວາມສຸກຫຼາຍ ແລະ ມາເພິ່ງພາເຮົາ. ເມື່ອເຮົາມອບໃຫ້ກັບມະນຸດ, ຜູ້ຄົນຮັກເຮົາດັ່ງທີ່ພວກເຂົາຮັກຊີວິດຂອງພວກເຂົາເອງ, ແຕ່ເມື່ອເຮົາຂໍສິ່ງຕ່າງໆຈາກພວກເຂົາ, ພວກເຂົາກໍຫຼີກເວັ້ນເຮົາ. ເປັນຫຍັງຈຶ່ງເປັນແບບນີ້? ພວກເຂົາບໍ່ສາມາດນຳເອົາ "ຄວາມຍຸຕິທຳ ແລະ ຄວາມມີເຫດຜົນ" ຂອງໂລກມະນຸດເຂົ້າສູ່ການປະຕິບັດບໍ? ເປັນຫຍັງເຮົາຈຶ່ງຮຽກຮ້ອງສິ່ງຕ່າງໆຈາກຜູ້ຄົນຊໍ້າແລ້ວຊໍ້າອີກ? ມັນເປັນຍ້ອນວ່າເຮົາບໍ່ມີຫຍັງແທ້ບໍ? ຜູ້ຄົນປະຕິບັດຕໍ່ເຮົາຄືກັບຄົນຂໍທານ. ເມື່ອເຮົາຂໍສິ່ງຕ່າງໆຈາກພວກເຂົາ, ພວກເຂົາກໍຍື່ນ "ຂອງເຫຼືອ" ຂອງພວກເຂົາຕໍ່ໜ້າເຮົາເພື່ອໃຫ້ເຮົາ "ຮັບເອົາ" ແລະ ເຖິງກັບເວົ້າວ່າພວກເຂົາດູແລເຮົາເປັນພິເສດ. ເຮົາຫຼຽວເບິ່ງໃບໜ້າທີ່ຂີ້ຮ້າຍ ແລະ ສະພາບທີ່ຜິດປົກກະຕິຂອງພວກເຂົາ ແລ້ວເຮົາກໍຈາກມະນຸດໄປອີກຄັ້ງ. ພາຍໃຕ້ສະຖານະການດັ່ງກ່າວ, ຜູ້ຄົນຍັງບໍ່ເຂົ້າໃຈ ແລະ ເອົາສິ່ງທີ່ເຮົາໄດ້ປະຕິເສດພວກເຂົານັ້ນກັບຄືນອີກຄັ້ງ, ລໍຖ້າການກັບມາຂອງເຮົາ. ເຮົາໄດ້ສະຫຼະເວລາຢ່າງຫຼວງຫຼາຍ ແລະ ໄດ້ຈ່າຍລາຄາຢ່າງສູງເພື່ອເຫັນແກ່ມະນຸດ, ແຕ່ໃນເວລານີ້ ບໍ່ຮູ້ວ່າຍ້ອນເຫດຜົນໃດ, ຄວາມສຳນຶກຂອງຜູ້ຄົນຈຶ່ງຍັງບໍ່ສາມາດປະຕິບັດໜ້າທີ່ເດີມຂອງພວກເຂົາໄດ້. ດ້ວຍເຫດນັ້ນ ເຮົາຈຶ່ງຂຽນ "ຂໍ້ສົງໄສທີ່ດື້ດ້ານ" ຂອງພວກເຂົາໃສ່ທ່າມກາງ "ພຣະທຳແຫ່ງຄວາມເລິກລັບ" ເພື່ອເຮັດໜ້າທີ່ເປັນ "ບ່ອນອ້າງອີງ" ສຳລັບຄົນຮຸ່ນອະນາຄົດ, ເພາະພຣະທຳເຫຼົ່ານີ້ເປັນ "ຜົນຂອງການຄົ້ນຄວ້າທາງວິທະຍາສາດ" ທີ່ເກີດຈາກ "ການເຮັດວຽກໜັກ" ຂອງຜູ້ຄົນ; ເຮົາຈະລຶບພຣະທຳເຫຼົ່ານີ້ຖິ້ມແບບເສີຍໆໄດ້ແນວໃດ? ນີ້ຈະບໍ່ເປັນ "ຄວາມລົ້ມແຫຼວ" ຕໍ່ເຈດຕະນາດີຂອງຜູ້ຄົນບໍ? ແທ້ຈິງແລ້ວ, ເຮົາກໍມີຄວາມສຳນຶກ, ສະນັ້ນ ເຮົາຈຶ່ງບໍ່ເຮັດໃນສິ່ງທີ່ມີເລ່ລ່ຽມ ແລະ ສົມຮູ້ຮ່ວມຄິດກັບມະນຸດ, ການກະທຳຂອງເຮົາບໍ່ໄດ້ເປັນແບບນັ້ນບໍ? ນີ້ບໍ່ແມ່ນ "ຄວາມຍຸຕິທຳ ແລະ ຄວາມມີເຫດຜົນ" ທີ່ມະນຸດກ່າວເຖິງບໍ? ໃນທ່າມກາງມະນຸດ, ເຮົາໄດ້ປະຕິບັດພາລະກິດຢ່າງບໍ່ຢຸດເຊົາຈົນເຖິງປັດຈຸບັນ. ດ້ວຍການມາເຖິງຂອງເວລາແບບມື້ນີ້, ຜູ້ຄົນຍັງບໍ່ຮູ້ຈັກເຮົາ, ພວກເຂົາຍັງປະຕິບັດຕໍ່ເຮົາຄືກັບຄົນແປກໜ້າ ແລະ ເຖິງກັບກຽດຊັງເຮົາຫຼາຍຂຶ້ນ ຍ້ອນເຮົາໄດ້ນຳພວກເຂົາໄປເຖິງ "ທາງຕັນ". ໃນເວລານີ້, ຄວາມຮັກທີ່ຢູ່ໃນຫົວໃຈຂອງພວກເຂົາໄດ້ຫາຍໄປແຕ່ດົນຢ່າງບໍ່ມີຮ່ອງຮອຍ. ເຮົາບໍ່ໄດ້ເວົ້າເກີນຂອບເຂດ, ແຮງໄກທີ່ເຮົາຈະດູຖູກມະນຸດ. ເຮົາສາມາດຮັກມະນຸດຊົ່ວນິດນິລັນ ແລະ ເຮົາຍັງສາມາດຊັງມະນຸດຊົ່ວນິດນິລັນອີກດ້ວຍ ແລະ ສິ່ງນີ້ຈະບໍ່ປ່ຽນແປງຈັກເທື່ອ, ຍ້ອນເຮົາມີຄວາມພາກພຽນ. ແຕ່ມະນຸດບໍ່ໄດ້ມີຄວາມພາກພຽນນີ້, ເຂົາເຮັດເປັນຮ້ອນໆ

ໜາວໆຕໍ່ເຮົາຢູ່ສະເໝີ, ເຂົາພຽງແຕ່ໃສ່ໃຈເຮົາໜ້ອຍດຽວເມື່ອເຮົາເປີດປາກຂອງເຮົາ ແລະ ເມື່ອເຮົາປິດປາກຂອງເຮົາ ແລະ ບໍ່ເວົ້າຫຍັງ, ທັນໃດເຂົາກໍຫາຍໄປໃນທ່າມກາງຄື້ນຂອງໂລກໃຫຍ່. ສະນັ້ນເຮົາຈຶ່ງສະຫຼຸບສິ່ງນີ້ເປັນສຸພາສິດສັ້ນໆວ່າ: ຜູ້ຄົນຂາດຄວາມພາກພຽນ ແລະ ສະນັ້ນ ພວກເຂົາຈຶ່ງບໍ່ສາມາດເຮັດໃຫ້ເຮົາພໍໃຈໄດ້.

ໃນຂະນະທີ່ຜູ້ຄົນກຳລັງຝັນ, ເຮົາໄດ້ເດີນທາງໄປປະເທດຕ່າງໆຂອງໂລກ ໂດຍກະຈາຍ "ກິ່ນແຫ່ງຄວາມຕາຍ" ທີ່ຢູ່ໃນມືຂອງເຮົາທ່າມກາງມະນຸດ. ທຸກຄົນປະຖິ້ມພະລັງໄວ້ເບື້ອງຫຼັງທັນທີ ແລະ ເຂົ້າສູ່ຊັ້ນຕໍ່ໄປຂອງຊີວິດມະນຸດ. ໃນທ່າມກາງມະນຸດຊາດ, ສິ່ງທີ່ມີຊີວິດໃດກໍຕາມແມ່ນບໍ່ສາມາດເຫັນໄດ້ອີກຕໍ່ໄປ, ຊາກສົບແມ່ນກະຈັດກະຈາຍໄປທົ່ວທິບ, ສິ່ງຕ່າງໆທີ່ເຕັມໄປດ້ວຍຊີວິດຊີວາກໍຫາຍໄປທັນທີຢ່າງບໍ່ມີຮ່ອງຮອຍ ແລະ ກິ່ນຂອງຊາກສົບທີ່ເຮັດໃຫ້ຫາຍໃຈບໍ່ອອກກໍແຜ່ຄຸມໄປທົ່ວແຜ່ນດິນ. ເຮົາກໍອັດໜ້າຂອງເຮົາທັນທີ ແລະ ຈາກມະນຸດໄປ, ຍ້ອນເຮົາກຳລັງເລີ່ມຕົ້ນຂັ້ນຕອນຕໍ່ໄປຂອງພາລະກິດ, ມອບບ່ອນຢູ່ອາໄສໃຫ້ກັບຄົນທີ່ກັບມາມີຊີວິດ ແລະ ເຮັດໃຫ້ທຸກຄົນດຳລົງຊີວິດຢູ່ໃນດິນແດນແຫ່ງອຸດົມຄະຕິ. ນີ້ແມ່ນດິນແດນທີ່ຖືກອວຍພອນ, ເປັນດິນແດນທີ່ບໍ່ມີຄວາມໂສກເສົ້າ ຫຼື ການເສົ້າເສຍໃຈ ເຊິ່ງເຮົາໄດ້ຈັດແຈງໄວ້ໃຫ້ກັບມະນຸດ. ນໍ້າທີ່ພຸ່ງອອກຈາກນໍ້າພຸໃນຮ່ອມພູກໍໃສຈົນສາມາດເຫັນພື້ນໄດ້, ມັນຫຼັ່ງໄຫຼໂດຍບໍ່ເຊົາ ແລະ ບໍ່ເຄີຍເຫືອດແຫ້ງຈັກເທື່ອ, ຜູ້ຄົນດຳລົງຊີວິດຢ່າງສະຫງົບສຸກກັບພຣະເຈົ້າ, ນົກກໍຮ້ອງເພງ ແລະ ໃນທ່າມກາງລົມທີ່ພັດຄ່ອຍໆ ແລະ ແສງແດດທີ່ອົບອຸ່ນ, ທັງສະຫວັນ ແລະ ແຜ່ນດິນໂລກກໍສະຫງົບລົງ. ມື້ນີ້ ໃນທີ່ນີ້, ຊາກສົບຂອງທຸກຄົນກະຈາຍໄປທົ່ວຢ່າງບໍ່ເປັນລະບຽບ. ໂດຍທີ່ຜູ້ຄົນບໍ່ຮູ້ຕົວ, ເຮົາໄດ້ປ່ອຍໂລກລະບາດທີ່ຢູ່ໃນມືຂອງເຮົາ ແລະ ຮ່າງກາຍຂອງມະນຸດກໍເນົ່າເປື່ອຍ, ບໍ່ເຫຼືອຮ່ອງຮອຍຂອງເນື້ອໜັງຕັ້ງແຕ່ຫົວຈົນຮອດໂປ້ຕີນ ແລະ ເຮົາກໍຈາກມະນຸດໄປໄກ. ເຮົາຈະບໍ່ເຕົ້າໂຮມກັນກັບມະນຸດອີກຈັກເທື່ອ, ເຮົາຈະບໍ່ຢູ່ທ່າມກາງມະນຸດຈັກເທື່ອ, ຍ້ອນຂັ້ນຕອນສຸດທ້າຍຂອງການຄຸ້ມຄອງທັງໝົດຂອງເຮົາໄດ້ມາເຖິງຈຸດສິ້ນສຸດແລ້ວ ແລະ ເຮົາຈະບໍ່ສ້າງມະນຸດຊາດອີກຄັ້ງ, ຈະບໍ່ໃສ່ໃຈມະນຸດອີກຕໍ່ໄປ. ຫຼັງຈາກທີ່ໄດ້ອ່ານພຣະທຳຈາກປາກຂອງເຮົາ, ທຸກຄົນກໍສູນເສຍຄວາມຫວັງ, ຍ້ອນພວກເຂົາບໍ່ຕ້ອງການຕາຍ, ແຕ່ຜູ້ໃດຈະບໍ່ "ຕາຍ" ເພື່ອ "ກັບມາມີຊີວິດ" ໃໝ່ແດ່? ເມື່ອເຮົາບອກຜູ້ຄົນວ່າ ເຮົາບໍ່ມີເວດມົນທີ່ຈະເຮັດໃຫ້ພວກເຂົາກັບຄືນມາມີຊີວິດ, ພວກເຂົາກໍຮ້ອງໄຫ້ຂຶ້ນດ້ວຍຄວາມເຈັບປວດ; ແນ່ນອນ ເຖິງແມ່ນເຮົາເປັນພຣະຜູ້ສ້າງ, ເຮົາກໍມີພຽງລິດອຳນາດທີ່ຈະເຮັດໃຫ້ຄົນຕາຍ ແລະ ບໍ່ມີຄວາມສາມາດທີ່ຈະເຮັດໃຫ້ພວກເຂົາກັບມາມີຊີວິດ. ໃນສິ່ງນີ້, ເຮົາກໍຂໍໂທດກັບມະນຸດດ້ວຍ. ສະນັ້ນ ເຮົາຈຶ່ງບອກມະນຸດກ່ອນລ່ວງໜ້າວ່າ "ເຮົາຕິດໜີ້ເຂົາທີ່ບໍ່ສາມາດໃຊ້ຄືນໄດ້", ແຕ່ເຂົາກໍຄິດວ່າເຮົາເຮັດເປັນສຸພາບ. ໃນປັດຈຸບັນ, ດ້ວຍການມາເຖິງຂອງຄວາມຈິງ, ເຮົາກໍຍັງເວົ້າເຖິງສິ່ງນີ້. ເຮົາຈະບໍ່ຂັດກັບຄວາມຈິງເມື່ອເຮົາກ່າວ. ໃນແນວຄິດຂອງພວກເຂົາ, ຜູ້ຄົນເຊື່ອວ່າມີຫຼາຍວິທີການທີ່ເຮົາກ່າວ ແລະ ສະນັ້ນ ພວກເຂົາຈຶ່ງຍຶດຕິດກັບພຣະທຳທີ່ເຮົາມອບໃຫ້ກັບພວກເຂົາຢູ່ສະເໝີ ໃນຂະນະທີ່ຫວັງສິ່ງອື່ນ. ສິ່ງເຫຼົ່ານີ້ບໍ່ແມ່ນແຮງຜັກດັນທີ່ບໍ່ຖືກຕ້ອງຂອງມະນຸດບໍ? ມັນຢູ່ພາຍໃຕ້ສະຖານະການເຫຼົ່ານີ້, ເຮົາຈຶ່ງກ້າເວົ້າ "ຢ່າງໝັ້ນໃຈ" ວ່າມະນຸດບໍ່ຮັກເຮົາ

ຢ່າງແທ້ຈິງ. ເຮົາຈະບໍ່ຫັນຫຼັງຂອງເຮົາໃຫ້ກັບຄວາມສຳນຶກ ແລະ ບິດເບືອນຄວາມຈິງ, ຍ້ອນເຮົາຈະບໍ່ນຳຜູ້ຄົນໄປສູ່ດິນແດນໃນອຸດົມຄະຕິຂອງພວກເຂົາ; ໃນທີ່ສຸດແລ້ວ ເມື່ອພາລະກິດຂອງເຮົາສຳເລັດລົງ, ເຮົາຈະນຳພາພວກເຂົາໄປສູ່ດິນແດນແຫ່ງຄວາມຕາຍ. ສະນັ້ນ ທາງທີ່ດີຜູ້ຄົນບໍ່ຕ້ອງຕໍ່ວ່າເຮົາ, ມັນບໍ່ແມ່ນຍ້ອນຜູ້ຄົນ "ຮັກ" ເຮົາບໍ? ມັນບໍ່ແມ່ນຍ້ອນຄວາມປາຖະໜາຂອງພວກເຂົາທີ່ຢາກໄດ້ພອນນັ້ນແຮງກ້າເກີນໄປບໍ? ຖ້າຜູ້ຄົນບໍ່ຕ້ອງການສະແຫວງຫາພອນ, ມັນຈະມີ "ຄວາມໂຊກຮ້າຍ" ນີ້ໄດ້ແນວໃດ? ຍ້ອນ "ຄວາມຊື່ສັດ" ຂອງຜູ້ຄົນທີ່ມີຕໍ່ເຮົາ, ຍ້ອນພວກເຂົາໄດ້ຕິດຕາມເຮົາເປັນເວລາຫຼາຍປີ, ເຮັດວຽກໜັກໂດຍບໍ່ເຄີຍປະກອບສ່ວນຫຍັງເລີຍ, ເຮົາຈຶ່ງເປີດເຜີຍສິ່ງທີ່ກຳລັງເກີດຂຶ້ນໃນ "ຫ້ອງລັບ" ແກ່ພວກເຂົາເລັກນ້ອຍ: ປັດຈຸບັນນີ້ ໃນເມື່ອວ່າພາລະກິດຂອງເຮົາຍັງບໍ່ໄດ້ໄປເຖິງຈຸດໃດໜຶ່ງ ແລະ ຜູ້ຄົນຍັງບໍ່ໄດ້ຖືກໂຍນສູ່ເຫວເລິກທີ່ກຳລັງເຜົາໄໝ້, ເຮົາແນະນຳໃຫ້ພວກເຂົາຈາກໄປໃຫ້ໄວເທົ່າທີ່ຈະໄວໄດ້, ທຸກຄົນທີ່ຄົງຢູ່ອາດຈະທົນທຸກກັບຄວາມໂຊກຮ້າຍ ແລະ ຄວາມໂຊກດີເລັກນ້ອຍ ແລະ ໃນທີ່ສຸດ ພວກເຂົາກໍຍັງຈະບໍ່ສາມາດຫຼີກເວັ້ນຄວາມຕາຍ. ເຮົາເປີດ "ປະຕູສູ່ຄວາມຮັ່ງມີ" ອອກກວ້າງໃຫ້ແກ່ພວກເຂົາ; ໃຜກໍຕາມທີ່ເຕັມໃຈຈາກໄປກໍຄວນເລີ່ມຕົ້ນເດີນທາງໃຫ້ໄວເທົ່າທີ່ຈະໄວໄດ້, ຖ້າພວກເຂົາລໍຖ້າຈົນຮອດການມາເຖິງຂອງການຂ້ຽນຕີ, ມັນກໍຈະຊ້າເກີນໄປ. ພຣະທຳເຫຼົ່ານີ້ບໍ່ແມ່ນການເຍາະເຍີ້ຍ, ພວກມັນແມ່ນຄວາມຈິງແທ້ໆ. ພຣະທຳຂອງເຮົາແມ່ນຖືກກ່າວຕໍ່ມະນຸດດ້ວຍຄວາມປາຖະໜາດີ ແລະ ຖ້າເຈົ້າບໍ່ໄປໃນຕອນນີ້, ເມື່ອໃດເຈົ້າຈະໄປ? ຜູ້ຄົນສາມາດໄວ້ໃຈໃນພຣະທຳຂອງເຮົາແທ້ບໍ?

ເຮົາບໍ່ເຄີຍຄິດຫຍັງຫຼາຍກ່ຽວກັບໂຊກຊະຕາຂອງມະນຸດ; ເຮົາພຽງແຕ່ປະຕິບັດຕາມຄວາມປະສົງຂອງເຮົາເອງ, ບໍ່ໄດ້ຖືກຈຳກັດໂດຍຜູ້ຄົນ. ເຮົາຈະສາມາດຖອນມືຂອງເຮົາຍ້ອນຄວາມຢ້ານຂອງພວກເຂົາໄດ້ແນວໃດ? ທົ່ວແຜນການຄຸ້ມຄອງທັງໝົດຂອງເຮົາ, ເຮົາບໍ່ເຄີຍຈັດແຈງເພີ່ມເຕີມສຳລັບປະສົບການຂອງມະນຸດ. ເຮົາພຽງແຕ່ເຮັດຕາມແຜນການເດີມຂອງເຮົາເທົ່ານັ້ນ. ໃນອະດີດ ຜູ້ຄົນ "ຖວາຍ" ຕົນເອງເພື່ອເຮົາ ແລະ ເຮົາກໍບໍ່ໄດ້ຮ້ອນ ຫຼື ໜາວຕໍ່ພວກເຂົາ. ໃນປັດຈຸບັນ, ພວກເຂົາໄດ້ "ສະຫຼະ" ຕົນເອງເພື່ອເຮົາ ແລະ ເຮົາກໍຍັງບໍ່ຮ້ອນ ຫຼື ໜາວຕໍ່ພວກເຂົາ. ເຮົາບໍ່ໄດ້ພໍໃຈໃນຕົນເອງ ຍ້ອນຜູ້ຄົນສະຫຼະຊີວິດຂອງພວກເຂົາເພື່ອເຮົາ ຫຼື ເຮົາບໍ່ໄດ້ມີຄວາມຮູ້ສຶກປິຕິຍິນດີຢ່າງໃຫຍ່ຫຼວງ, ແຕ່ສືບຕໍ່ສົ່ງພວກເຂົາໄປທີ່ແດນປະຫານຕາມແຜນການຂອງເຮົາ. ເຮົາບໍ່ໃສ່ໃຈຕໍ່ທ່າທີຂອງພວກເຂົາໃນລະຫວ່າງການສາລະພາບຜິດ, ຫົວໃຈທີ່ເຢືອກເຢັນ ແລະ ເຢັນຊາຂອງເຮົາຈະຖືກສຳຜັດໂດຍຫົວໃຈຂອງມະນຸດໄດ້ແນວໃດ? ເຮົາເປັນໜຶ່ງໃນສັດເຈົ້າອາລົມທີ່ຢູ່ທ່າມກາງມະນຸດຊາດບໍ? ຫຼາຍຄັ້ງ ເຮົາໄດ້ເຕືອນຜູ້ຄົນວ່າເຮົາບໍ່ມີຄວາມຮູ້ສຶກ, ແຕ່ພວກເຂົາກໍພຽງໄດ້ແຕ່ຍິ້ມ ໂດຍເຊື່ອວ່າເຮົາພຽງແຕ່ເຮັດເປັນສຸພາບ. ເຮົາໄດ້ເວົ້າວ່າ "ເຮົາບໍ່ຮູ້ຈັກປັດຊະຍາຊີວິດຂອງໂລກມະນຸດ", ແຕ່ຜູ້ຄົນກໍບໍ່ເຄີຍເຊື່ອສິ່ງນັ້ນ ແລະ ເວົ້າວ່າວິທີການທີ່ເຮົາເວົ້ານັ້ນແມ່ນມີຫຼາກຫຼາຍວິທີ. ຍ້ອນຂໍ້ຈຳກັດຂອງແນວຄິດນີ້ຂອງມະນຸດ, ເຮົາຈຶ່ງບໍ່ຮູ້ວ່າດ້ວຍນໍ້າສຽງໃດ ແລະ ດ້ວຍວິທີການໃດທີ່ຈະເວົ້າກັບຜູ້ຄົນ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງພຽງແຕ່ສາມາດເວົ້າແບບກົງໄປກົງມາຢ່າງບໍ່ມີທາງເລືອກອື່ນ. ເຮົາສາມາດເຮັດຫຍັງໄດ້ອີກແດ່? ວິທີການທີ່

ຜູ້ຄົນເວົ້າກໍມີຫຼາຍ, ພວກເຂົາເວົ້າວ່າ "ພວກຂ້ານ້ອຍບໍ່ຄວນເພິ່ງພາຄວາມຮູ້ສຶກ ແຕ່ປະຕິບັດຄວາມຊອບທຳ" ເຊິ່ງເປັນຄຳຂວັນປະເພດທີ່ພວກເຂົາຮ້ອງໄຫ້ເປັນເວລາຫຼາຍປີ, ແຕ່ພວກເຂົາກໍບໍ່ສາມາດເຮັດຕາມຄຳເວົ້າຂອງພວກເຂົາໄດ້, ຄຳເວົ້າຂອງພວກເຂົາແມ່ນວ່າງເປົ່າ, ສະນັ້ນ ເຮົາຈຶ່ງເວົ້າວ່າຜູ້ຄົນຂາດຄວາມສາມາດທີ່ຈະເຮັດໃຫ້ "ຄຳເວົ້າ ແລະ ຄວາມສຳເລັດຂອງພວກເຂົາເກີດຂຶ້ນພ້ອມໆກັນ". ໃນຫົວໃຈຂອງພວກເຂົາ, ຜູ້ຄົນເຊື່ອວ່າການເຮັດແບບນັ້ນແມ່ນເປັນການຮຽນແບບເຮົາ, ແຕ່ເຮົາກໍບໍ່ສົນໃຈໃນການຮຽນແບບຂອງພວກເຂົາ, ເຮົາເບື່ອໜ່າຍ ແລະ ເມື່ອຍກັບສິ່ງນັ້ນ. ເປັນຫຍັງຜູ້ຄົນຈຶ່ງຫັນມາຕໍ່ຕ້ານຜູ້ທີ່ລ້ຽງພວກເຂົາຢູ່ສະເໝີ? ເຮົາໄດ້ມອບໃຫ້ມະນຸດໜ້ອຍເກີນໄປບໍ? ເປັນຫຍັງຜູ້ຄົນຈຶ່ງບູຊາຊາຕານຢ່າງລັບໆຢູ່ລັບຫຼັງເຮົາສະເໝີ? ມັນເປັນຄືກັບວ່າພວກເຂົາເຮັດວຽກໃຫ້ເຮົາ ແລະ ເງິນເດືອນທີ່ເຮົາໃຫ້ພວກເຂົາແມ່ນບໍ່ພຽງພໍທີ່ຈະຈ່າຍຄ່າຄອງຊີບຂອງພວກເຂົາ, ຍ້ອນແບບນັ້ນພວກເຂົາຈຶ່ງຊອກຫາວຽກອື່ນທີ່ຢູ່ນອກຊົ່ວໂມງເຮັດວຽກເພື່ອເພີ່ມລາຍໄດ້ຂອງພວກເຂົາຂຶ້ນເປັນສອງເທົ່າ, ຍ້ອນຄ່າໃຊ້ຈ່າຍຂອງຜູ້ຄົນແມ່ນມີຫຼາຍເກີນໄປ ແລະ ພວກເຂົາເບິ່ງຄືກັບວ່າບໍ່ຮູ້ວິທີທີ່ຈະໃຊ້ຊີວິດຕໍ່ໄປ. ຖ້າມັນເປັນແບບນັ້ນແທ້ໆ, ເຮົາຈະຂໍໃຫ້ພວກເຂົາອອກຈາກ "ໂຮງງານ" ຂອງເຮົາ. ດົນນານມາແລ້ວ ເຮົາໄດ້ອະທິບາຍຕໍ່ມະນຸດວ່າ ການເຮັດວຽກໃຫ້ເຮົາບໍ່ໄດ້ມີການປະຕິບັດພິເສດ: ໂດຍບໍ່ມີຂໍ້ຍົກເວັ້ນ, ເຮົາປະຕິບັດຕໍ່ຜູ້ຄົນຢ່າງຍຸຕິທຳ ແລະ ມີເຫດຜົນ, ນຳໃຊ້ລະບົບທີ່ວ່າ "ເຮັດວຽກຫຼາຍໄດ້ຮັບຫຼາຍ, ເຮັດວຽກໜ້ອຍໄດ້ຮັບໜ້ອຍ, ບໍ່ເຮັດວຽກ ບໍ່ໄດ້ຮັບຫຍັງເລີຍ". ເມື່ອເຮົາເວົ້າ, ເຮົາບໍ່ໄດ້ປິດບັງຫຍັງໄວ້; ຖ້າຄົນໃດກໍຕາມເຊື່ອວ່າ "ກົດລະບຽບໃນໂຮງງານ" ຂອງເຮົາເຄັ່ງຄັດເກີນໄປ, ພວກເຂົາກໍຄວນອອກໄປທັນທີ, ເຮົາຈະຈ່າຍສຳລັບ "ຄ່າເດີນທາງ" ຂອງພວກເຂົາ. ເຮົາ "ຜ່ອນຜັນ" ໃນການຈັດການກັບຄົນດັ່ງກ່າວ, ເຮົາບໍ່ບັງຄັບພວກເຂົາໃຫ້ຢູ່. ໃນທ່າມກາງບັນດາຄົນຈຳນວນຫຼວງຫຼາຍທີ່ນັບບໍ່ຖ້ວນເຫຼົ່ານີ້, ເຮົາບໍ່ສາມາດຊອກຫາ "ພະນັກງານ" ທີ່ເຮັດໃຫ້ເຮົາພໍໃຈໄດ້ບໍ? ຜູ້ຄົນບໍ່ຄວນປະເມີນເຮົາຕໍ່າເກີນໄປ! ຖ້າຜູ້ຄົນຍັງບໍ່ເຊື່ອຟັງເຮົາ ແລະ ຕ້ອງການສະແຫວງຫາ "ວຽກງານ" ຢູ່ບ່ອນອື່ນ, ເຮົາຈະບໍ່ບັງຄັບພວກເຂົາ, ເຮົາຍິນດີ, ເຮົາບໍ່ມີທາງເລືອກ! ມັນບໍ່ແມ່ນຍ້ອນເຮົາມີ "ກົດລະບຽບ ແລະ ລະບຽບການ" ຫຼາຍເກີນໄປບໍ?

ວັນທີ 8 ພຶດສະພາ 1992

# ບົດທີ 41

ຄັ້ງໜຶ່ງເຮົາເຄີຍໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍໃນທ່າມກາງມະນຸດ ແຕ່ພວກເຂົາບໍ່ສັງເກດເຫັນ ເຮົາຈຶ່ງໄດ້ໃຊ້ພຣະທຳຂອງເຮົາເພື່ອເປີດເຜີຍສິ່ງນັ້ນໃຫ້ແກ່ພວກເຂົາເທື່ອລະໜ້ອຍ. ເຖິງຢ່າງນັ້ນ ມະນຸດກໍຍັງບໍ່ສາມາດເຂົ້າໃຈພຣະທຳຂອງເຮົາ ແລະ ເຂົາຍັງບໍ່ຮູ້ຈຸດປະສົງຂອງແຜນການຂອງເຮົາ. ສະນັ້ນ, ເນື່ອງຈາກຄວາມຂາດເຂີນ ແລະ ຄວາມບົກຜ່ອງຂອງພວກເຂົາ, ມະນຸດຈຶ່ງເຮັດສິ່ງທີ່ຂັດຂວາງການຄຸ້ມຄອງຂອງເຮົາ ແລະ ນີ້ເຮັດໃຫ້ວິນຍານທີ່ສົກກະປົກທຸກຮູບແບບມີໂອກາດເຂົ້າຫາ ເພື່ອວ່າມະນຸດຈະກາຍເປັນເຫຍື່ອຂອງພວກມັນ ແລະ ຖືກທໍລະມານໂດຍວິນຍານທີ່ສົກກະປົກເຫຼົ່ານີ້ຈົນພວກເຂົາເປິເປື້ອນຈົນໝົດ. ພຽງເມື່ອນັ້ນ ເຮົາຈຶ່ງເຫັນເຈດຕະນາ ແລະ ເປົ້າໝາຍຂອງມະນຸດຢ່າງຊັດເຈນ. ເຮົາເສົ້າໃຈພາຍໃນກ້ອນເມກ: ເປັນຫຍັງມະນຸດຈຶ່ງເຮັດເພື່ອຕົວເອງຕະຫຼອດ? ການຂ້ຽນຕີຂອງເຮົາບໍ່ໄດ້ມີເຈດຕະນາເຮັດໃຫ້ພວກເຂົາສົມບູນບໍ? ເຮົາຈົງໃຈໂຈມຕີທັດສະນະຄະຕິທີ່ດີຂອງພວກເຂົາບໍ? ພາສາຂອງມະນຸດແມ່ນງົດງາມ ແລະ ອ່ອນໂຍນຫຼາຍ ໃນຂະນະທີ່ການກະທຳຂອງເຂົາແມ່ນຂາດລະບຽບຢ່າງສິ້ນເຊີງ. ເປັນຫຍັງການຮຽກຮ້ອງທີ່ເຮົາມີຕໍ່ມະນຸດຈຶ່ງບໍ່ມີຜົນຕະຫຼອດ? ເປັນໄປໄດ້ບໍວ່າ ເຮົາກຳລັງຂໍໃຫ້ໝາປີນຕົ້ນໄມ້? ເຮົາກຳລັງສ້າງຄວາມວຸ້ນວາຍກັບສິ່ງທີ່ບໍ່ມີຫຍັງບໍ? ໃນຊ່ວງໄລຍະຂອງແຜນການຄຸ້ມຄອງທັງໝົດຂອງເຮົາ, ເຮົາໄດ້ຕັດ "ແຜນການທົດລອງ" ປະເພດຕ່າງໆອອກ; ຢ່າງໃດກໍຕາມ, ເນື່ອງຈາກສະພາບທີ່ບໍ່ດີ ແລະ ການຂາດແສງແດດເປັນເວລາຫຼາຍປີ, ພູມີປະເທດກໍມີການປ່ຽນແປງຢູ່ຕະຫຼອດເວລາ ເຊິ່ງເຮັດໃຫ້ດິນ "ເສື່ອມໂຊມ". ສະນັ້ນ, ພາຍໃນຄວາມຊົງຈຳຂອງເຮົາ, ເຮົາໄດ້ປະຖິ້ມຕອນດິນດັ່ງກ່າວໂດຍນັບບໍ່ຖ້ວນ. ແມ່ນແຕ່ໃນຕອນນີ້, ດິນສ່ວນໃຫຍ່ກໍຍັງສືບຕໍ່ປ່ຽນແປງ. ໃນມື້ໃດມື້ໜຶ່ງ, ຖ້າດິນປ່ຽນແປງເປັນປະເພດອື່ນຢ່າງແທ້ຈິງ, ເຮົາກໍຈະປະຖິ້ມມັນໄວ້ທາງຂ້າງດ້ວຍການດີດມືຂອງເຮົາ. ນີ້ບໍ່ແມ່ນພາລະກິດຂອງເຮົາໃນຍຸກປັດຈຸບັນຢ່າງແທ້ຈິງບໍ? ແຕ່ມວນມະນຸດບໍ່ຮູ້ຈັກສິ່ງນີ້ແມ່ນແຕ່ໜ້ອຍເລີຍ; ພວກເຂົາພຽງແຕ່ຖືກ "ຂ້ຽນຕີ" ພາຍໃຕ້ "ການຊີ້ນຳ" ຂອງເຮົາ. ນັ້ນມີປະໂຫຍດຫຍັງ? ເຮົາສາມາດເປັນພຣະເຈົ້າທີ່ມາຂ້ຽນຕີມະນຸດຢ່າງເປີດເຜີຍບໍ? ໃນສະຫວັນເບື້ອງເທິງ, ຄັ້ງໜຶ່ງເຮົາເຄີຍວາງແຜນວ່າ ເມື່ອເຮົາມາຢູ່ໃນທ່າມກາງມະນຸດ ເຮົາຈະກາຍເປັນໜຶ່ງໃນພວກເຂົາ ເພື່ອວ່າ ທຸກຄົນທີ່ເຮົາຮັກຈະສາມາດຢູ່ໃກ້ເຮົາ. ຢ່າງໃດກໍຕາມ, ຕອນນີ້ເມື່ອໄດ້ມາເຖິງຂັ້ນຕອນນີ້ໃນປັດຈຸບັນ, ມະນຸດບໍ່ພຽງແຕ່ບໍ່ຕິດຕໍ່ກັບເຮົາ ແຕ່ພັດຢູ່ຫ່າງຈາກເຮົາ ຍ້ອນການຂ້ຽນຕີຂອງເຮົາ. ເຮົາບໍ່ໄດ້ຮ້ອງໄຫ້ຍ້ອນການຫຼີກເວັ້ນຂອງເຂົາ. ສາມາດເຮັດຫຍັງກັບມັນໄດ້ແດ່? ມະນຸດລ້ວນແລ້ວແຕ່ເປັນນັກສະແດງທີ່ຮ້ອງເພງໄປຕາມທຳນອງເພງໃດກໍຕາມທີ່ຫຼິ້ນຢູ່. ເຮົາໝັ້ນໃຈໃນຄວາມສາມາດຂອງເຮົາໃນການປ່ອຍໃຫ້ມະນຸດ "ຫຼຸດ" ຈາກກຳມືຂອງເຮົາ ແລະ ເຮົາຍິ່ງໝັ້ນໃຈໃນຄວາມສາມາດຂອງເຮົາໃນການນຳເອົາພວກເຂົາກັບຄືນມາສູ່ "ໂຮງງານ" ຂອງເຮົາຈາກ "ພາກສ່ວນອື່ນ". ໃນຕອນນີ້ ມະນຸດສາມາດມີຄວາມບໍ່ພໍໃຈຫຍັງແດ່? ມະນຸດຈະສາມາດເຮັດຫຍັງໃຫ້ເຮົາ? ມະນຸດບໍ່ຄືກັນກັບຫຍ້າທີ່ເຕີບໃຫຍ່ຢູ່ເທິງກຳແພງບໍ? ແຕ່ເຖິງຢ່າງນັ້ນ ເຮົາກໍບໍ່ທຳຮ້າຍມະນຸດ

ຍ້ອນຄວາມຜິດນີ້ ແຕ່ກົງກັນຂ້າມເຮົາຈະໃຫ້ສານອາຫານຂອງເຮົາແກ່ພວກເຂົາ. ມະນຸດອ່ອນແອ, ໄຮ້ອຳນາດ ແລະ ຂາດສານອາຫານ; ນັ້ນແມ່ນວິທີທີ່ພວກເຂົາເປັນ. ເຮົາປ່ຽນຫົວໃຈທີ່ເຢືອກເຢັນຂອງມະນຸດດ້ວຍໂອບກອດທີ່ອົບອຸ່ນຂອງເຮົາ: ມີຜູ້ໃດອີກທີ່ສາມາດເຮັດສິ່ງດັ່ງກ່າວນີ້ໄດ້? ເປັນຫຍັງເຮົາຈຶ່ງປະຕິບັດພາລະກິດດັ່ງກ່າວໃນທ່າມກາງມະນຸດ? ມະນຸດສາມາດເຂົ້າໃຈຫົວໃຈຂອງເຮົາແທ້ບໍ?

ໃນທ່າມກາງຜູ້ທີ່ເຮົາໄດ້ຊົງເລືອກ, ເຮົາໄດ້ເຮັດ “ທຸລະກິດ” ເພື່ອໃຫ້ມີການໄປມາຂອງຜູ້ຄົນໃນເຮືອນຂອງເຮົາໂດຍຫຼັ່ງໄຫຼຢູ່ຕະຫຼອດເວລາຢ່າງບໍ່ມີວັນສິ້ນສຸດ. ພວກເຂົາທຸກຄົນເຮັດພິທີກຳຕ່າງໆນາໆຢູ່ບ່ອນຂອງເຮົາ ຄືກັບວ່າ ພວກເຂົາກຳລັງສົນທະນາເລື່ອງທຸລະກິດກັບເຮົາ ເຊິ່ງເຮັດໃຫ້ພາລະກິດຂອງເຮົາວຸ້ນວາຍຫຼາຍ ແລະ ບາງເທື່ອກໍຫຍຸ້ງຫຼາຍຈົນເຮົາບໍ່ມີໂອກາດຈັດການກັບການຜິດຖຽງກັນໃນທ່າມກາງພວກເຂົາ. ເຮົາແນະນຳຜູ້ຄົນບໍ່ໃຫ້ເພີ່ມພາລະໃຫ້ກັບເຮົາ; ແທນທີ່ຈະອາໄສເຮົາຕະຫຼອດເວລາພວກເຂົາຄວນປະຕິບັດຕາມແນວທາງຂອງພວກເຂົາເອງ. ພວກເຂົາບໍ່ສາມາດເປັນເດັກນ້ອຍຢູ່ໃນເຮືອນຂອງເຮົາຕະຫຼອດ; ມັນຈະມີປະໂຫຍດຫຍັງໃນນັ້ນ? ສິ່ງທີ່ເຮົາເຮັດແມ່ນທຸລະກິດທີ່ສຳຄັນ; ເຮົາບໍ່ໄດ້ເປີດ “ຮ້ານຂາຍອາຫານຫວ່າງໃນຄຸ້ມບ້ານ” ຫຼື “ຮ້ານສະດວກຊື້” ນ້ອຍໆ. ມະນຸດທຸກຄົນບໍ່ສາມາດເຂົ້າໃຈກອບຄວາມຄິດຂອງເຮົາ ຄືກັບວ່າພວກເຂົາຈິງໃຈເວົ້າຕະຫຼົກກັບເຮົາ, ຄືກັບວ່າພວກເຂົາທຸກຄົນແມ່ນເປັນເດັກນ້ອຍຂີ້ດື້ທີ່ມີຄວາມຢາກຫຼິ້ນຢ່າງບໍ່ຮູ້ຈັກພໍ ໂດຍບໍ່ເຄີຍຄຳນຶງເຖິງເລື່ອງທີ່ສຳຄັນ, ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ຫຼາຍຄົນບໍ່ສາມາດເຮັດສຳເລັດ “ວຽກບ້ານ” ທີ່ເຮົາໄດ້ມອບໝາຍໃຫ້ພວກເຂົາ. ຜູ້ຄົນແບບນີ້ຈະສາມາດມີຄວາມກ້າສະແດງໃບໜ້າຂອງພວກເຂົາຕໍ່ໜ້າ “ຄູ” ຂອງພວກເຂົາໄດ້ແນວໃດ? ເປັນຫຍັງພວກເຂົາຈຶ່ງບໍ່ເອົາໃຈໃສ່ໃນສິ່ງທີ່ພວກເຂົາຄວນເຮັດ? ຫົວໃຈຂອງມະນຸດແມ່ນວັດຖຸປະເພດໃດ? ຈົນຮອດປັດຈຸບັນ ເຮົາກໍຍັງບໍ່ມີຄວາມຊັດເຈນກັບສິ່ງນີ້. ເປັນຫຍັງຫົວໃຈຂອງມະນຸດຈຶ່ງປ່ຽນໄປໂດຍບໍ່ມີສິ້ນສຸດ? ມັນເປັນຄືກັບມື້ໜຶ່ງໃນເດືອນມິຖຸນາ: ບຶດໜຶ່ງແສງແດດເຜົາໄໝ້, ບຶດໜຶ່ງເຕັມໄປດ້ວຍກ້ອນເມກປົກໜາ ແລະ ບຶດໜຶ່ງກໍມີລົມພັດສຽງດັງຢ່າງຮຸນແຮງ. ແລ້ວເປັນຫຍັງມະນຸດຈຶ່ງບໍ່ສາມາດຮຽນຮູ້ຈາກປະສົບການ? ບາງເທື່ອສິ່ງທີ່ເຮົາກ່າວກໍແມ່ນການກ່າວເກີນຄວາມຈິງ. ມະນຸດບໍ່ຮູ້ແມ່ນແຕ່ຈະຖືຄັນຫົ່ມໄປນຳໃນຊ່ວງລະດູຝົນ ແລະ ເນື່ອງຈາກຄວາມໂງ່ຈ້າຂອງພວກເຂົາ, ຝົນທີ່ຕົກໜັກຢ່າງກະທັນຫັນຈຶ່ງເຮັດໃຫ້ພວກເຂົາປຽກໄປທົ່ວໂຕຫຼາຍຄັ້ງຈົນນັບບໍ່ຖ້ວນ ຄືກັບວ່າເຮົາຈິງໃຈຢອກພວກເຂົາ ແລະ ພວກເຂົາກໍຖືກຝົນທີ່ຕົກຈາກສະຫວັນຖະລົ່ມຢູ່ຕະຫຼອດ. ບາງເທື່ອເຮົາ “ໂຫດຮ້າຍ” ເກີນໄປ ເຊິ່ງເຮັດໃຫ້ມະນຸດສັບສົນ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ຮອບຄອບ ແລະ ບໍ່ຮູ້ວ່າຈະເຮັດຫຍັງ. ບໍ່ມີມະນຸດຜູ້ໃດທີ່ເຄີຍເຂົ້າໃຈເປົ້າໝາຍ ຫຼື ຄວາມສຳຄັນຂອງພາລະກິດຂອງເຮົາຢ່າງແທ້ຈິງ. ເມື່ອເປັນເຊັ່ນນັ້ນ ພວກເຂົາທຸກຄົນກໍເຮັດພາລະກິດແຫ່ງການຂັດຂວາງ ແລະ ການຂ້ຽນຕີນີ້ດ້ວຍຕົວພວກເຂົາເອງ. ເຮົາຕັ້ງໃຈທີ່ຈະຂ້ຽນຕີມະນຸດແທ້ບໍ? ເປັນຫຍັງມະນຸດຈຶ່ງເຮັດໃຫ້ຕົວເອງວຸ້ນວາຍ? ເປັນຫຍັງພວກເຂົາຈຶ່ງຍ່າງເຂົ້າຫາແຮ້ວຕະຫຼອດ? ເປັນຫຍັງພວກເຂົາບໍ່ເຈລະຈາກັບເຮົາ ແຕ່ກົງກັນຂ້າມ ພາກັນຊອກຫາວິທີທາງເຮັດພາລະກິດເພື່ອຕົວພວກເຂົາເອງ? ເປັນໄປໄດ້ບໍວ່າ ທຸກສິ່ງທີ່ເຮົາມອບໃຫ້ແກ່ມະນຸດແມ່ນບໍ່ພຽງພໍ?

ເຮົາເຜີຍແຜ່ "ພາລະກິດໃໝ່" ຂອງເຮົາໃນທ່າມກາງມວນມະນຸດທຸກຄົນ ແລະ ຍ້ອນການເຜີຍແຜ່ຂອງເຮົາໄດ້ປຸກຄວາມເຫຼື້ອມໃສຫຼາຍໃນມະນຸດ, ພວກເຂົາທຸກຄົນຈຶ່ງສຶກສາມັນຢ່າງລະອຽດ ແລະ ລະມັດລະວັງ ແລະ ຜ່ານການສຶກສາຢ່າງເອົາໃຈໃສ່ນີ້ ພວກເຂົາຈຶ່ງໄດ້ເຂົ້າໃຈຫຼາຍຂຶ້ນ. ເບິ່ງຄືວ່າບົດຂຽນຂອງເຮົາແມ່ນເປັນນະວະນິຍາຍທີ່ມະຫັດສະຈັນ ແລະ ຊັບຊ້ອນຫຼາຍ; ເບິ່ງຄືວ່າເປັນບົດກະວີຮ້ອຍແກ້ວກ່ຽວກັບຄວາມຮັກ; ເບິ່ງຄືວ່າເປັນການສົນທະນາກ່ຽວກັບຫຼັກສູດການເມືອງ; ເບິ່ງຄືວ່າເປັນບົດສະຫຼຸບກ່ຽວກັບຄວາມຮອບຮູ້ດ້ານເສດຖະກິດ. ເນື່ອງຈາກບົດຂຽນຂອງເຮົາອຸດົມສົມບູນຫຼາຍ ຈຶ່ງມີຫຼາຍຄວາມຄິດເຫັນກ່ຽວກັບມັນ ແລະ ບໍ່ມີຜູ້ໃດສາມາດສະໜອງຄຳນຳທີ່ສະຫຼຸບພາລະກິດນີ້ຂອງເຮົາໄດ້. ມະນຸດອາດມີຄວາມຮູ້ ແລະ ພອນສະຫວັນທີ່ "ດີເລີດ" ແຕ່ພາລະກິດນີ້ຂອງເຮົາແມ່ນພຽງພໍທີ່ຈະເຮັດໃຫ້ທຸກຄົນທີ່ມີຄວາມສາມາດ ແລະ ພອນສະຫວັນສັບສົນໄດ້. ແມ່ນແຕ່ໃນຂະນະທີ່ພວກເຂົາເວົ້າວ່າ "ເລືອດອາດຈະໄຫຼ, ນໍ້າຕາຈະຫຼັ່ງ ແຕ່ຄົນເຮົາບໍ່ຄວນກົ້ມຫົວຂອງຕົນ", ພວກເຂົາກໍໄດ້ກົ້ມຫົວຂອງພວກເຂົາໂດຍທີ່ບໍ່ຮູ້ໂຕ ເພື່ອສະແດງເຖິງການຍອມຈຳນົນຂອງພວກເຂົາຕໍ່ບົດຂຽນຂອງເຮົາ. ຈາກບົດຮຽນກ່ຽວກັບປະສົບການຂອງເຂົາ, ມະນຸດໄດ້ສະຫຼຸບບົດຂຽນຂອງເຮົາວ່າ ເປັນໜັງສືສະຫວັນທີ່ຕົກຈາກທ້ອງຟ້າ. ແຕ່ເຖິງຢ່າງນັ້ນ ເຮົາກໍຊຸກຍູ້ມະນຸດບໍ່ໃຫ້ອ່ອນໄຫວງ່າຍເກີນໄປ. ໃນມຸມມອງຂອງເຮົາ, ສິ່ງທີ່ເຮົາໄດ້ກ່າວລ້ວນແລ້ວແຕ່ທຳມະດາ; ຢ່າງໃດກໍຕາມ, ເຮົາຫວັງວ່າໃນໜັງສື "ກາລານຸກົມແຫ່ງຊີວິດ" ທີ່ປະກອບຢູ່ໃນພາລະກິດຂອງເຮົາ ຜູ້ຄົນຈະສາມາດພົບເຫັນບາງຢ່າງກ່ຽວກັບວິທີທາງແຫ່ງການດຳລົງຊີວິດ; ໃນໜັງສື "ປາຍທາງຂອງມະນຸດ" ພວກເຂົາອາດສະແຫວງຫາຄວາມໝາຍຂອງຊີວິດ; ໃນໜັງສື "ຄວາມລັບຂອງສະຫວັນ" ພວກເຂົາອາດສະແຫວງຫາຄວາມປະສົງຂອງເຮົາ; ແລະໃນໜັງສື "ເສັ້ນທາງຂອງມະນຸດ" ພວກເຂົາອາດສະແຫວງຫາສິລະປະໃນການດຳລົງຊີວິດ. ຖ້າສິ່ງຕ່າງໆເປັນແບບນີ້ຈະບໍ່ດີກວ່າບໍ? ເຮົາບໍ່ບັງຄັບມະນຸດ; ຖ້າຄົນ "ບໍ່ສົນໃຈ" ໃນບົດຂຽນຂອງເຮົາ, ເຮົາຈະ "ສົ່ງເງິນຄືນ" ໃຫ້ພວກເຂົາສຳລັບໜັງສືຂອງເຮົາ ພ້ອມກັບ "ຄ່າບໍລິການ". ເຮົາບໍ່ບັງຄັບຜູ້ໃດ. ໃນຖານະທີ່ເປັນຜູ້ຂຽນໜັງສືເຫຼັ້ມນີ້, ຄວາມຫວັງດຽວຂອງເຮົາກໍຄື ຫວັງວ່າຜູ້ອ່ານຈະຮັກບົດຂຽນຂອງເຮົາ ແຕ່ວ່າຄວາມຖືກໃຈຂອງຜູ້ຄົນແມ່ນແຕກຕ່າງກັນສະເໝີ. ດ້ວຍເຫດນັ້ນ ເຮົາຈຶ່ງຊຸກຍູ້ມະນຸດບໍ່ໃຫ້ເຮັດໃຫ້ໂອກາດໃນອະນາຄົດຂອງພວກເຂົາມີອັນຕະລາຍພຽງແຕ່ຍ້ອນວ່າ ພວກເຂົາບໍ່ສາມາດປະຖິ້ມການຄຳນຶງເຖິງໜ້າຕາ. ຖ້າພວກເຂົາເຮັດເຊັ່ນນັ້ນ ແລ້ວເຮົາ ເຊິ່ງກໍຄືຜູ້ທີ່ໃຈດີຄືເຮົາ ຈະສາມາດທົນຕໍ່ຄວາມອັບອາຍທີ່ຍິ່ງໃຫຍ່ໄດ້ແນວໃດ? ຖ້າຜູ້ອ່ານບໍ່ຮັກບົດຂຽນຂອງເຮົາ, ເຮົາກໍຫວັງວ່າ ພວກເຈົ້າຈະສົ່ງຄຳແນະນຳທີ່ມີຄ່າຂອງພວກເຈົ້າມາຫາເຮົາ ເພື່ອເຮັດໃຫ້ການຂຽນຂອງເຮົາກ້າວໜ້າ ແລະດ້ວຍເຫດນັ້ນ ກໍເຮັດໃຫ້ເນື້ອຫາຂອງການຂຽນຂອງເຮົາດີຂຶ້ນຜ່ານຂໍ້ຜິດພາດຂອງມະນຸດ. ນີ້ຈະເປັນປະໂຫຍດທັງຜູ້ຂຽນ ແລະ ຜູ້ອ່ານ, ບໍ່ແມ່ນບໍ? ເຮົາບໍ່ຮູ້ວ່າ ການກ່າວຂອງເຮົາຖືກຕ້ອງ ຫຼື ບໍ່ ແລະບາງເທື່ອ ດ້ວຍວິທີນີ້ ເຮົາຈະສາມາດເຮັດໃຫ້ຄວາມສາມາດໃນການຂຽນຂອງເຮົາດີຂຶ້ນ ຫຼື ບາງເທື່ອເຮັດໃຫ້ມິດຕະພາບລະຫວ່າງພວກເຮົາເຂັ້ມແຂງຂຶ້ນ. ໂດຍທົ່ວໄປແລ້ວ, ເຮົາຫວັງວ່າ ທຸກຄົນຈະສາມາດຮ່ວມມືກັບພາລະກິດຂອງເຮົາໂດຍບໍ່ລົບກວນສິ່ງນີ້ ເພື່ອວ່າພຣະທຳຂອງເຮົາອາດຈະຖືກສົ່ງຕໍ່

ເຖິງທຸກຄອບຄົວ ແລະ ທຸກເຮືອນ ແລະ ເພື່ອວ່າທຸກຄົນຢູ່ເທິງແຜ່ນດິນໂລກຈະສາມາດດຳລົງຊີວິດຢູ່ພາຍໃນພຣະທຳຂອງເຮົາ. ນີ້ແມ່ນເປົ້າໝາຍຂອງເຮົາ. ດ້ວຍການອ່ານໜັງສື "ບົດເລື່ອງກ່ຽວກັບຊີວິດ" ໃນພຣະທຳຂອງເຮົາ, ເຮົາຫວັງວ່າ ທຸກຄົນຈະໄດ້ຮັບບາງສິ່ງ, ບໍ່ວ່າຈະເປັນຄະຕິຊີວິດ ຫຼື ຄວາມຮູ້ກ່ຽວກັບຄວາມຜິດພາດທີ່ເກີດຂຶ້ນກັບໂລກມະນຸດ ຫຼື ສິ່ງທີ່ເຮົາຕ້ອງການຈາກມະນຸດ ຫຼື "ຄວາມລັບ" ຂອງຜູ້ຄົນກ່ຽວກັບອານາຈັກໃນປັດຈຸບັນ. ຢ່າງໃດກໍຕາມ, ເຮົາຊຸກຍູ້ໃຫ້ມະນຸດເບິ່ງໜັງສື "ເລື່ອງເສຍຫາຍຂອງມະນຸດໃນປັດຈຸບັນ"; ນີ້ຈະເປັນປະໂຫຍດແກ່ທຸກຄົນ ຫຼື ມັນບໍ່ໄດ້ເສຍຫາຍຫຍັງທີ່ຈະອ່ານຈາກໜັງສື "ຄວາມລັບຫຼ້າສຸດ" ເປັນປະຈຳ ເຊິ່ງຍິ່ງຈະມີປະໂຫຍດສຳລັບຊີວິດຂອງມະນຸດ. ນອກຈາກນີ້, ຈົ່ງອ່ານບົດຄວາມ "ເລື່ອງຍອດນິຍົມ" ເປັນປະຈຳ. ນີ້ຍິ່ງຈະບໍ່ມີປະໂຫຍດສຳລັບຊີວິດຂອງມະນຸດບໍ? ການຮັບພິຈາລະນາເອົາຄຳແນະນຳຂອງເຮົາແມ່ນບໍ່ໄດ້ເປັນອັນຕະລາຍຫຍັງ, ການເບິ່ງວ່າມັນມີຜົນໃດໜຶ່ງ ຫຼື ບໍ່ ແລະ ຫຼັງຈາກນັ້ນກໍເລົ່າໃຫ້ເຮົາຟັງ ກ່ຽວກັບຄວາມຮູ້ສຶກຂອງພວກເຈົ້າຫຼັງຈາກທີ່ໄດ້ອ່ານສິ່ງນີ້ ເພື່ອວ່າເຮົາອາດຈະສາມາດສັ່ງຢາທີ່ຖືກຕ້ອງໄດ້ດີຂຶ້ນ ແລະ ໃນທີ່ສຸດ ກໍຈະກຳຈັດພະຍາດຂອງມະນຸດທຸກຄົນຢ່າງສົມບູນ. ເຮົາບໍ່ຮູ້ສິ່ງທີ່ພວກເຈົ້າຄິດກ່ຽວກັບຄຳແນະນຳຂອງເຮົາ ແຕ່ເຮົາຫວັງວ່າ ພວກເຈົ້າຈະຖືເອົາສິ່ງເຫຼົ່ານັ້ນເປັນຂໍ້ມູນສຳລັບການອ້າງອີງຂອງພວກເຈົ້າ. ນັ້ນຈະເປັນແນວໃດ?

ວັນທີ 12 ພຶດສະພາ 1992

# ບົດທີ 42

ທັນທີທີ່ພາລະກິດໃໝ່ເລີ່ມຕົ້ນຂຶ້ນ, ທຸກຄົນກໍມີທາງເຂົ້າໃໝ່ ແລະ ພວກເຂົາກໍຈັບມືກັນກ້າວໄປກັບເຮົາ. ພວກເຮົາຍ່າງຢູ່ ຫົນທາງອັນຍິ່ງໃຫຍ່ແຫ່ງອານາຈັກຮ່ວມກັນ ແລະ ມີຄວາມສະໜິດສະໜົມກັນຫຼາຍລະຫວ່າງມະນຸດ ແລະ ເຮົາ. ເພື່ອສະແດງຄວາມຮູ້ສຶກຂອງເຮົາ ແລະ ເພື່ອສະແດງທ່າທີຂອງເຮົາຕໍ່ມະນຸດ, ເຮົາໄດ້ກ່າວຕໍ່ມະນຸດຢູ່ສະເໝີ. ເຖິງຢ່າງໃດກໍຕາມ ສ່ວນໜຶ່ງຂອງພຣະທຳເຫຼົ່ານີ້ອາດທຳຮ້າຍຜູ້ຄົນ ໃນຂະນະທີ່ພຣະທຳບາງຂໍ້ອາດມີປະໂຫຍດຫຼາຍສຳລັບພວກເຂົາ ແລະ ສະນັ້ນ ເຮົາຈຶ່ງແນະນຳໃຫ້ຜູ້ຄົນຟັງຢ່າງໃກ້ຊິດຍິ່ງຂຶ້ນໃນສິ່ງທີ່ອອກມາຈາກປາກຂອງເຮົາ. ໂດຍສະເພາະແລ້ວ ຖ້ອຍຄຳຂອງເຮົາອາດບໍ່ສວຍງາມ ແລະ ສຸພາບຮຽບຮ້ອຍ, ແຕ່ຖ້ອຍຄຳເຫຼົ່ານັ້ນລ້ວນແລ້ວແຕ່ເປັນພຣະທຳທີ່ມາຈາກສ່ວນເລິກໃນຫົວໃຈຂອງເຮົາ. ຍ້ອນມະນຸດເປັນເພື່ອນຂອງເຮົາ, ເຮົາໄດ້ສືບຕໍ່ປະຕິບັດພາລະກິດຂອງເຮົາທ່າມກາງມະນຸດ ແລະ ມະນຸດກໍພະຍາຍາມເຖິງທີ່ສຸດເພື່ອຮ່ວມມືກັບເຮົາເຊັ່ນກັນ, ໂດຍຢ້ານຢ່າງເລິກໆວ່າຈະລົບກວນພາລະກິດຂອງເຮົາ. ໃນຊ່ວງເວລານີ້, ຫົວໃຈຂອງເຮົາແມ່ນເຕັມໄປດ້ວຍຄວາມດີອົກດີໃຈຢ່າງໃຫຍ່ ຍ້ອນເຮົາໄດ້ຮັບເອົາຄົນບາງສ່ວນ ແລະ ສະນັ້ນ “ທຸລະກິດ” ຂອງເຮົາກໍບໍ່ຕົກຕໍ່າອີກຕໍ່ໄປ; ມັນຈະບໍ່ປະກອບດ້ວຍພຣະທຳທີ່ວ່າງເປົ່າອີກຕໍ່ໄປ ແລະ “ຕະຫຼາດຜະລິດຕະພັນພິເສດ” ຂອງເຮົາກໍຈະບໍ່ດຳເນີນໄປຢ່າງຊັກຊ້າອີກຕໍ່ໄປ. ໃນທີ່ສຸດແລ້ວ ຜູ້ຄົນແມ່ນສະຫຼາດ, ພວກເຂົາລ້ວນແລ້ວແຕ່ເຕັມໃຈທີ່ຈະ “ອຸທິດຕົນເອງ” ເພື່ອນາມຂອງເຮົາ ແລະ ສະຫງ່າລາສີຂອງເຮົາ ແລະມີພຽງແຕ່ໃນລັກສະນະນີ້ເທົ່ານັ້ນທີ່ “ຕະຫຼາດພິເສດ” ຂອງເຮົາຈຶ່ງຈະໄດ້ຮັບເອົາ “ສິນຄ້າ” ໃໝ່ບາງຢ່າງ ແລະ ດ້ວຍເຫດນັ້ນ ໃນໂລກຝ່າຍວິນຍານຂອງເຮົາ “ລູກຄ້າ” ຫຼາຍຄົນຈຶ່ງໄດ້ມາຊື້ “ສິນຄ້າ” ຂອງເຮົາ. ພຽງແຕ່ໃນຊ່ວງເວລານີ້ເປັນຕົ້ນມາ ເຮົາຈຶ່ງໄດ້ຮັບເອົາສະຫງ່າລາສີ, ພຽງແຕ່ເມື່ອນັ້ນ ພຣະທຳທີ່ອອກມາຈາກປາກຂອງເຮົາຈຶ່ງບໍ່ເປັນພຣະທຳທີ່ວ່າງເປົ່າອີກຕໍ່ໄປ. ເຮົາໄດ້ຮັບໄຊຊະນະ ແລະ ໄດ້ກັບມາດ້ວຍໄຊຊະນະ ແລະ ທຸກຄົນກໍສະເຫຼີມສະຫຼອງກັບເຮົາ. ໃນຊ່ວງເວລານີ້ ມັງກອນແດງທີ່ຍິ່ງໃຫຍ່ຍັງໄດ້ມາເພື່ອ “ສະຫຼອງ”, ເພື່ອສະແດງຄວາມຊື່ນຊົມທີ່ມັນມີຕໍ່ເຮົາ, ເພື່ອສະແດງວ່າມັນຍອມຂາບຕົນຂອງເຮົາເຊິ່ງເຮົາເບິ່ງວ່າເປັນສະຫງ່າລາສີ. ຕັ້ງແຕ່ເວລາແຫ່ງການເນລະມິດສ້າງຈົນເຖິງປັດຈຸບັນ, ເຮົາໄດ້ສູ້ຮົບໃນຫຼາຍສະໜາມຮົບຢ່າງມີໄຊຊະນະ ແລະ ໄດ້ເຮັດຫຼາຍສິ່ງທີ່ເປັນຕາເຊີດຊູ. ຄັ້ງໜຶ່ງ ຫຼາຍຄົນເຄີຍສະເຫຼີມສະຫຼອງກັບເຮົາ, ມອບຄຳສັນລະເສີນໃຫ້ກັບເຮົາ ແລະ ເຕັ້ນລຳເພື່ອເຮົາ. ເຖິງແມ່ນວ່າ ສິ່ງເຫຼົ່ານີ້ເປັນສາກທີ່ຕື່ນເຕັ້ນ ແລະ ບໍ່ສາມາດລືມໄດ້, ເຮົາກໍບໍ່ເຄີຍສະແດງຮອຍຍິ້ມຂອງເຮົາ ຍ້ອນເຮົາບໍ່ທັນໄດ້ເອົາຊະນະມະນຸດເທື່ອ ແລະ ພຽງແຕ່ປະຕິບັດສ່ວນໜຶ່ງຂອງພາລະກິດທີ່ຄ້າຍຄືກັບການເນລະມິດສ້າງ. ປັດຈຸບັນແມ່ນບໍ່ຄືກັບອະດີດ. ເຮົາໄດ້ມອບຮອຍຍິ້ມເທິງບັນລັງ, ເຮົາໄດ້ເອົາຊະນະມະນຸດ ແລະ ທຸກຄົນກໍກົ້ມລົງເພື່ອນະມັດສະການຕໍ່ໜ້າເຮົາ. ຜູ້ຄົນໃນປັດຈຸບັນບໍ່ຄືກັບຄົນທີ່ຢູ່ໃນອະດີດ. ພາລະກິດຂອງເຮົາບໍ່ແມ່ນເພື່ອປັດຈຸບັນໄດ້ແນວໃດ? ມັນບໍ່ແມ່ນເພື່ອສະຫງ່າລາສີຂອງເຮົາໄດ້ແນວໃດ? ເພື່ອອະນາຄົດທີ່ສົດໃສກວ່າເດີມ, ເຮົາຈະເຮັດໃຫ້ພາລະກິດທັງໝົດຂອງເຮົາໃນມະນຸດ

ຊັດເຈນຂຶ້ນເລື້ອຍໆ ເພື່ອວ່າສະຫງ່າລາສີທັງໝົດຂອງເຮົາອາດ "ຢູ່" ໃນມະນຸດ ທີ່ຖືກສ້າງຂຶ້ນ. ເຮົາຈະຮັບເອົາສິ່ງນີ້ໃຫ້ເປັນຫຼັກການແຫ່ງພາລະກິດຂອງເຮົາ. ສຳລັບຄົນທີ່ເຕັມໃຈຮ່ວມມືກັບເຮົາ ຈົ່ງລຸກຂຶ້ນ ແລະ ເຮັດວຽກຢ່າງໜັກ ເພື່ອວ່າສະຫງ່າລາສີຂອງເຮົາຈະໄດ້ເຕີມເຕັມທ້ອງຟ້າຫຼາຍຍິ່ງຂຶ້ນ. ປັດຈຸບັນນີ້ແມ່ນເວລາທີ່ຈະປະຕິບັດແຜນການທີ່ຍິ່ງໃຫຍ່. ທຸກຄົນທີ່ຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຄວາມຮັກຂອງເຮົາ ແມ່ນມີໂອກາດທີ່ຈະນຳໃຊ້ຄວາມສາມາດຂອງພວກເຂົາໃນນີ້ກັບເຮົາ ແລະ ເຮົາຈະນຳພາທຸກສິ່ງໃຫ້ "ຕັ້ງໝັ້ນ" ເພື່ອພາລະກິດຂອງເຮົາ. ນົກທີ່ບິນຢູ່ໃນທ້ອງຟ້າແມ່ນສະຫງ່າລາສີຂອງເຮົາທີ່ຢູ່ໃນທ້ອງຟ້າ, ທະເລທີ່ຢູ່ເທິງແຜ່ນດິນໂລກແມ່ນການກະທຳຂອງເຮົາທີ່ຢູ່ເທິງແຜ່ນດິນໂລກ, ເຈົ້ານາຍຂອງທຸກສິ່ງແມ່ນການສະແດງຂອງເຮົາທ່າມກາງສິ່ງທັງປວງ ແລະ ເຮົານຳໃຊ້ທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກໃຫ້ເປັນທຶນສຳລັບການຄຸ້ມຄອງຂອງເຮົາ, ເຮັດໃຫ້ທຸກສິ່ງເພີ່ມທະວີ, ຈະເລີນຮຸ່ງເຮືອງ ແລະ ເຕັມໄປດ້ວຍຊີວິດ.

ໃນເວລາແຫ່ງການເນລະມິດສ້າງ, ເຮົາໄດ້ກຳນົດແລ້ວວ່າ ພາລະກິດຂອງເຮົາຢູ່ເທິງແຜ່ນດິນໂລກຈະມາເຖິງຈຸດສິ້ນສຸດຢ່າງສົມບູນໃນຍຸກສຸດທ້າຍ. ເວລາທີ່ພາລະກິດຂອງເຮົາສິ້ນສຸດລົງແມ່ນເປັນເວລາທີ່ການກະທຳທັງໝົດຂອງເຮົາຖືກສະແດງອອກໃນທ້ອງຟ້າ. ເຮົາຈະເຮັດໃຫ້ຜູ້ຄົນເທິງແຜ່ນດິນໂລກຮັບຮູ້ເຖິງການກະທຳຂອງເຮົາ ແລະ ການກະທຳຂອງເຮົາຈະຕ້ອງຖືກພິສູດຢູ່ຕໍ່ໜ້າ "ທີ່ນັ່ງແຫ່ງການພິພາກສາ", ເພື່ອວ່າພວກມັນຈະຖືກຮັບຮູ້ໃນທ່າມກາງຜູ້ຄົນທົ່ວແຜ່ນດິນໂລກ ເຊິ່ງເປັນຜູ້ທີ່ຈະຍິນຍອມ. ສະນັ້ນ ຫຼັງຈາກນັ້ນ ເຮົາຈະເລີ່ມຕົ້ນກິດຈະການຂອງເຮົາທີ່ບໍ່ເຄີຍຖືກປະຕິບັດມາກ່ອນໃນຍຸກທີ່ຜ່ານມາ. ຕັ້ງແຕ່ນີ້ເປັນຕົ້ນໄປ, ເຮົາຈະເຮັດໃຫ້ການກະທຳຂອງເຮົາຊັດເຈນເທື່ອລະຂັ້ນຕອນເພື່ອວ່າສະຕິປັນຍາຂອງເຮົາ, ຄວາມມະຫັດສະຈັນຂອງເຮົາ ແລະ ຄວາມບໍ່ສາມາດຢັ່ງເຖິງຂອງເຮົາຈະເປັນທີ່ຮັບຮູ້ ແລະ ຖືກພິສູດໃນທຸກດ້ານຂອງສັງຄົມ. ໂດຍສະເພາະແລ້ວ, ຝ່າຍປົກຄອງທັງໝົດເທິງແຜ່ນດິນໂລກຈະຖືກເຮັດໃຫ້ຮັບຮູ້ການກະທຳຂອງເຮົາ, ຈົນກວ່າການກະທຳຂອງເຮົາຈະຖືກພິພາກສາໂດຍ "ຜູ້ພິພາກສາ" ແລະ "ຖືກປົກປ້ອງ" ໂດຍ "ທະນາຍຄວາມ" ແລະ ດ້ວຍເຫດນັ້ນ ການກະທຳຂອງເຮົາຈະເປັນທີ່ຮັບຮູ້ ເຊິ່ງຈະເຮັດໃຫ້ທຸກຄົນກົ້ມຫົວຂອງພວກເຂົາລົງ ແລະ ຍິນຍອມ. ຈາກເວລານີ້ເປັນຕົ້ນໄປ, ການກະທຳຂອງເຮົາຈະເປັນທີ່ຍອມຮັບໂດຍທຸກດ້ານຂອງສັງຄົມ ແລະ ນີ້ຈະເປັນຊ່ວງເວລາທີ່ເຮົາຈະຮັບເອົາສະຫງ່າລາສີທັງໝົດເທິງແຜ່ນດິນໂລກ. ໃນເວລານັ້ນ, ເຮົາຈະປາກົດຕໍ່ມະນຸດ ແລະ ບໍ່ລີ້ລັບອີກຕໍ່ໄປ. ໃນປັດຈຸບັນ, ການກະທຳຂອງເຮົາຍັງບໍ່ທັນໄປເຖິງຈຸດສູງສຸດເທື່ອ. ພາລະກິດຂອງເຮົາກຳລັງກ້າວໄປຂ້າງໜ້າ ແລະ ເມື່ອມັນໄປເຖິງຈຸດສູງສຸດ ນັ້ນກໍຈະເປັນເວລາທີ່ມັນສຳເລັດລົງ. ເຮົາຈະເອົາຊະນະປະຊາຊົນຂອງທຸກຊົນຊາດຢ່າງສົມບູນ, ເຮົາຈະເຮັດໃຫ້ສັດຮ້າຍທີ່ປ່າເຖື່ອນເຊື່ອຟັງຄືກັບແກະຢູ່ຕໍ່ໜ້າເຮົາ ແລະ ເຮົາຈະເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ອ່ອນນ້ອມຢູ່ຕໍ່ໜ້າເຮົາຄືກັບປະຊາຊົນເທິງແຜ່ນດິນໂລກ. ເຮົາຈະເອົາຊະນະສັດຕູທັງໝົດຂອງເຮົາຢູ່ໃນສະຫວັນ ແລະ ຈະເຮັດໃຫ້ຄູ່ຕໍ່ສູ້ຂອງເຮົາເທິງແຜ່ນດິນໂລກຖືກເອົາຊະນະ. ນີ້ແມ່ນແຜນການຂອງເຮົາ ແລະ ຄວາມມະຫັດສະຈັນແຫ່ງການກະທຳຂອງເຮົາ. ມະນຸດພຽງແຕ່ສາມາດດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງທຳມະຊາດ, ພາຍໃຕ້

ການນຳພາຂອງເຮົາ, ເຂົາບໍ່ສາມາດຕັດສິນໃຈດ້ວຍຕົນເອງ! ຜູ້ໃດສາມາດຫຼົບໜີຈາກມືຂອງເຮົາໄດ້ແດ່? ເຮົາໄດ້ຈັດປະເພດທຳມະຊາດທັງໝົດ, ເຮັດໃຫ້ມັນຢູ່ພາຍໃນກົດເກນ ແລະ ມັນເປັນຍ້ອນສິ່ງນີ້ເທົ່ານັ້ນ ຈຶ່ງມີກົດເກນດັ່ງກ່າວເທິງແຜ່ນດິນໂລກດັ່ງຄວາມອົບອຸ່ນແຫ່ງລະດູໃບໄມ້ປົ່ງ ແລະ ຄວາມເຢັນຂອງລະດູໃບໄມ້ຫຼົ່ນ. ເຫດຜົນທີ່ວ່າເປັນຫຍັງດອກໄມ້ທີ່ຢູ່ເທິງແຜ່ນດິນໂລກຈຶ່ງແຫ່ວແຫ້ງໃນລະດູໜາວ ແລະ ອອກດອກໃນລະດູຮ້ອນ ກໍຍ້ອນຄວາມມະຫັດສະຈັນຈາກມືຂອງເຮົາ; ເຫດຜົນທີ່ວ່າເປັນຫຍັງຫ່ານຈຶ່ງບິນໄປທາງທິດໃຕ້ໃນລະດູໜາວກໍຍ້ອນເຮົາໄດ້ປັບອຸນຫະພູມ; ແລະ ເຫດຜົນທີ່ວ່າເປັນຫຍັງທະເລຈຶ່ງເປັນຄື້ນກໍຍ້ອນເຮົາຕ້ອງການຈົມສິ່ງຕ່າງໆທີ່ຢູ່ເທິງໜ້າທະເລ. ແມ່ນຫຍັງທີ່ບໍ່ໄດ້ຖືກຈັດແຈງໂດຍເຮົາ? ຕັ້ງແຕ່ເວລານີ້ເປັນຕົ້ນໄປ, “ເສດຖະກິດແຫ່ງທຳມະຊາດ” ຂອງມະນຸດກໍຫາຍໄປທັງໝົດໂດຍພຣະທຳຂອງເຮົາ ແລະ ຜູ້ຄົນຈະບໍ່ກຳຈັດການສະຖິດຢູ່ຂອງເຮົາອີກຕໍ່ໄປ ຍ້ອນການມີຢູ່ຂອງ “ກົດເກນທຳມະຊາດ”. ຜູ້ໃດຈະປະຕິເສດການເປັນຢູ່ຂອງພຣະຜູ້ປົກຄອງສິ່ງທັງປວງ? ໃນສະຫວັນ, ເຮົາເປັນຫົວໜ້າ; ທ່າມກາງສິ່ງທັງປວງ, ເຮົາເປັນພຣະຜູ້ເປັນເຈົ້າ; ແລະ ທ່າມກາງທຸກຄົນ, ເຮົາຄືອັນດັບໜຶ່ງ. ຜູ້ໃດກ້າປົກປິດສິ່ງນີ້ໂດຍການເອົາ “ສີທາ” ໃສ່ຢ່າງງ່າຍດາຍບໍ? ຄວາມບໍ່ຈິງສາມາດລົບກວນການມີຢູ່ຂອງຄວາມຈິງບໍ? ໃນໂອກາດທີ່ພິເສດນີ້, ເຮົາຈະເລີ່ມຕົ້ນພາລະກິດທີ່ຢູ່ໃນມືຂອງເຮົາອີກຄັ້ງ, ບໍ່ທົນທຸກກັບການແຊກແຊງຂອງມະນຸດອີກຕໍ່ໄປ ແລະ ສືບຕໍ່ “ຕີດ” ເຄື່ອງຈັກ.

ເຮົາໄດ້ເພີ່ມຫຼາກຫຼາຍ “ເຄື່ອງປຸງລົດ” ໃສ່ໃນພຣະທຳຂອງເຮົາ ແລະ ດ້ວຍເຫດນັ້ນ ມັນຈະຄືກັບວ່າ ເຮົາແມ່ນໜຶ່ງໃນພໍ່ຄົວສຸດຍອດຂອງມະນຸດ. ເຖິງແມ່ນວ່າ ຜູ້ຄົນບໍ່ຮູ້ຈັກວິທີປຸງອາຫານຂອງພວກເຂົາ, ພວກເຂົາກໍພໍໃຈໃນລົດຊາດ; ດ້ວຍການຖື “ຈານ”, ພວກເຂົາທຸກຄົນໄດ້ຊີມລົດຊາດ “ອາຫານ” ທີ່ເຮົາໄດ້ຈັດຕຽມໃຫ້. ເຮົາບໍ່ຮູ້ວ່າເປັນຫຍັງ, ຜູ້ຄົນຈຶ່ງຕ້ອງການກິນອາຫານທີ່ເຮົາໄດ້ຈັດຕຽມເປັນການສ່ວນຕົວຫຼາຍຂຶ້ນ. ມັນເປັນຄືກັບວ່າພວກເຂົາໃຫ້ກຽດເຮົາຢ່າງສູງ, ຄືກັບວ່າພວກເຂົາເບິ່ງເຮົາເປັນເຄື່ອງປຸງອາຫານທີ່ສູງສົ່ງທີ່ສຸດ ແລະ ບໍ່ຄຳນຶງເຖິງຄົນອື່ນເລີຍ. ຍ້ອນເຮົາມີສັກສີໃນຕົນເອງຫຼາຍ, ເຮົາຈຶ່ງບໍ່ປາຖະໜາທີ່ຈະໂຈມຕີ “ຖ້ວຍເຂົ້າເຫຼັກ” ຂອງຄົນອື່ນຍ້ອນເຫດຜົນສ່ວນຕົວຂອງເຮົາ. ສະນັ້ນເຮົາຈຶ່ງຖືໂອກາດນັ້ນ ກ້າວອອກໄປຈາກ “ເຮືອນຄົວ” ແລະ ໃຫ້ຄົນອື່ນມີໂອກາດສ້າງຊື່ສຽງໃຫ້ກັບຕົນເອງ. ມີແຕ່ໃນລັກສະນະນີ້ເທົ່ານັ້ນ ຫົວໃຈຂອງເຮົາຈຶ່ງໝັ້ນຄົງ; ເຮົາບໍ່ຕ້ອງການເຮັດໃຫ້ຄົນເຊີດຊູເຮົາ ແລະ ດູຖູກຄົນອື່ນ, ນັ້ນບໍ່ແມ່ນສິ່ງທີ່ຖືກຕ້ອງ. ແມ່ນຫຍັງຄືຄຸນຄ່າຂອງການມີສະຖານະໃນຫົວໃຈຂອງຜູ້ຄົນ? ເຮົາຫຍາບຄາຍ ແລະ ບໍ່ມີເຫດຜົນຂະໜາດນັ້ນແທ້ບໍ? ເຮົາເຕັມໃຈທີ່ຈະຮຽກຮ້ອງເອົາສະຖານະແທ້ບໍ? ຖ້າເປັນດັ່ງນັ້ນ, ແລ້ວເປັນຫຍັງເຮົາຈຶ່ງເລີ່ມຕົ້ນກິດຈະການທີ່ຍິ່ງໃຫຍ່ດັ່ງກ່າວ? ເຮົາບໍ່ໄດ້ປາຖະໜາທີ່ຈະດີ້ນລົນເພື່ອຊື່ສຽງ ແລະ ຊັບສິນກັບຄົນອື່ນ, ເຮົາລັງກຽດຊື່ສຽງ ແລະ ຊັບສິນເທິງແຜ່ນດິນໂລກ, ນີ້ບໍ່ແມ່ນສິ່ງທີ່ເຮົາສະແຫວງຫາ. ເຮົາບໍ່ຖືເອົາມະນຸດເປັນແບບຢ່າງ, ເຮົາບໍ່ຕໍ່ສູ້ ຫຼື ຍາດຊິງ, ແຕ່ຫາລ້ຽງຊີວິດໂດຍການເພິ່ງພາ “ຝີມື” ຂອງເຮົາ ແລະ ບໍ່ເຮັດສິ່ງທີ່ຜິດສິນທຳ. ດ້ວຍເຫດນັ້ນ, ເມື່ອເຮົາຍ່າງທົ່ວແຜ່ນດິນໂລກ, ເຮົາເຮັດກ່ອນ ແລະ ຫຼັງຈາກນັ້ນຈຶ່ງຮຽກຂໍ “ຄ່າຕອບແທນສຳລັບງານຝີມືຂອງເຮົາ”, ມີພຽງແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນຄວາມຍຸຕິທຳ ແລະ ຄວາມມີເຫດຜົນທີ່

ມະນຸດກ່າວເຖິງ. ບໍ່ມີການເວົ້າໂອ້ອວດໃນສິ່ງນີ້, ບໍ່ໄດ້ເວົ້າຫຼຸດລົງແມ່ນແຕ່ໜ້ອຍດຽວ; ເຮົາກ່າວຕາມຄວາມໝາຍເດີມຂອງຄວາມຈິງ. ເຮົາຍ່າງກັບໄປກັບມາທ່າມກາງມະນຸດ, ຊອກຫາຄົນທີ່ຍຸຕິທຳ ແລະ ມີເຫດຜົນ, ແຕ່ກໍບໍ່ມີຜົນຫຍັງເລີຍ. ຍ້ອນຜູ້ຄົນຮັກໃນການຕໍ່ລອງ, ລາຄາຈຶ່ງສູງເກີນໄປ ຫຼື ຕໍ່າເກີນໄປ ແລະ ດ້ວຍເຫດນັ້ນ ເຮົາກໍຍັງປະຕິບັດໜ້າທີ່ຢູ່ໃນມືຂອງເຮົາທີ່ຖືກ "ມອບໝາຍໃຫ້ເຮົາເຮັດ". ໃນປັດຈຸບັນ, ເຮົາຍັງບໍ່ຮູ້ວ່າເປັນຫຍັງມະນຸດຈຶ່ງບໍ່ປະຕິບັດຕາມໜ້າທີ່ຂອງເຂົາ ແລະ ເປັນຫຍັງເຂົາຈຶ່ງບໍ່ຮູ້ຈັກວ່າວຸດທິພາວະຂອງເຂົາສູງຫຼາຍສໍ່າໃດ. ຜູ້ຄົນແມ່ນແຕ່ບໍ່ຮູ້ຈັກວ່າວຸດທິພາວະຂອງພວກເຂົາໜັກສອງສາມກຣາມ ຫຼື ສອງສາມຫຼຽງ[ກ]. ດ້ວຍເຫດນັ້ນ ພວກເຂົາຍັງລໍ້ລວງເຮົາ. ມັນເປັນຄືກັບວ່າພາລະກິດຂອງເຮົານັ້ນສູນເປົ່າ ຄືກັບວ່າພຣະທຳຂອງເຮົາເປັນພຽງແຕ່ສຽງກ້ອງຢູ່ໃນພູເຂົາໃຫຍ່ ແລະ ບໍ່ມີຜູ້ໃດຮັບຮູ້ເຖິງຮາກຂອງພຣະທຳ ແລະ ຖ້ອຍຄຳຂອງເຮົາ. ດ້ວຍເຫດນັ້ນ ເຮົາຈຶ່ງໃຊ້ສິ່ງນີ້ໃຫ້ເປັນພື້ນຖານເພື່ອສະຫຼຸບຄຳພັງເພີຍທີສາມທີ່ວ່າ: "ຜູ້ຄົນບໍ່ຮູ້ຈັກເຮົາ ຍ້ອນພວກເຂົາບໍ່ເຫັນເຮົາ". ມັນເປັນຄືກັບວ່າ ເມື່ອໄດ້ກິນພຣະທຳຂອງເຮົາ, ຜູ້ຄົນກໍກິນຢາບາງຢ່າງເພື່ອຊ່ວຍໃນການຍ່ອຍອາຫານ ແລະ ຍ້ອນຜົນຂ້າງຄຽງຂອງຢາຮຸນແຮງຫຼາຍ, ພວກເຂົາຈຶ່ງໄດ້ສູນເສຍຄວາມຊົງຈຳ ແລະ ສະນັ້ນ ພຣະທຳຂອງເຮົາຈຶ່ງກາຍເປັນສິ່ງທີ່ຖືກລືມໂດຍມະນຸດຊາດ ແລະ ບ່ອນທີ່ເຮົາອາໄສຢູ່ກໍກາຍເປັນແຈທີ່ພວກເຂົາລືມ. ຍ້ອນສິ່ງນີ້ ເຮົາຈຶ່ງເສົ້າໃຈ. ເປັນຫຍັງເຮົາໄດ້ປະຕິບັດພາລະກິດຫຼາຍຢ່າງ, ແຕ່ບໍ່ມີຫຼັກຖານກ່ຽວກັບພາລະກິດນັ້ນໃນຜູ້ຄົນ? ເຮົາບໍ່ໄດ້ພະຍາຍາມຢ່າງພຽງພໍບໍ? ຫຼື ມັນເປັນຍ້ອນເຮົາບໍ່ເຂົ້າໃຈວ່າມະນຸດຕ້ອງການຫຍັງບໍ? ບໍ່ມີສິ່ງໃດທີ່ເຮົາສາມາດເຮັດກ່ຽວກັບເລື່ອງນີ້ເລີຍ, ທາງເລືອກດຽວຂອງເຮົາກໍຄື ໃຊ້ບົດບັນຍັດແຫ່ງການບໍລິຫານຂອງເຮົາເພື່ອເອົາຊະນະທຸກຄົນ. ເຮົາຈະບໍ່ເປັນແມ່ທີ່ໜ້າຮັກອີກຕໍ່ໄປ ແຕ່ຈະຄຸ້ມຄອງມະນຸດຊາດທັງປວງດັ່ງພໍ່ທີ່ເຂັ້ມງວດ!

ວັນທີ 15 ພຶດສະພາ 1992

ກ "ຫຼຽງ" ແມ່ນໜ່ວຍວັດແທກນໍ້າໜັກຂອງຈີນ, ໜຶ່ງຫຼຽງແມ່ນ 50 ກຣາມ.

# ບົດທີ 43

ບາງເທື່ອ ມັນເປັນຍ້ອນບົດບັນຍັດບໍລິຫານຂອງເຮົາເທົ່ານັ້ນ ຜູ້ຄົນຈຶ່ງ "ສົນໃຈຫຼາຍ" ໃນພຣະທຳຂອງເຮົາ. ຖ້າພວກເຂົາບໍ່ໄດ້ຖືກປົກຄອງດ້ວຍບົດບັນຍັດບໍລິຫານຂອງເຮົາ, ພວກເຂົາທຸກຄົນກໍຈະສົ່ງສຽງຄາງຄືກັບເສືອທີ່ຫາກໍຖືກລົບກວນ. ໃນແຕ່ລະມື້ ເຮົາພະເນຈອນຢູ່ທ່າມກາງກ້ອນເມກໂດຍເຝົ້າເບິ່ງມະນຸດຊາດທີ່ປົກຄຸມແຜ່ນດິນໂລກໃນຂະນະທີ່ພວກເຂົາວຸ້ນວາຍຢູ່ບໍ່ຢຸດ, ຖືກເຮົາຄວບຄຸມໂດຍຜ່ານບົດບັນຍັດບໍລິຫານຂອງເຮົາ. ໃນລັກສະນະນີ້ ມະນຸດຊາດແມ່ນຖືກຮັກສາໃຫ້ເປັນລະບົບລະບຽບ ແລະ ເຮົາຈຶ່ງເຮັດໃຫ້ບົດບັນຍັດບໍລິຫານຂອງເຮົາເປັນຢູ່ຢ່າງຖາວອນ. ຕັ້ງແຕ່ເວລານີ້ເປັນຕົ້ນໄປ, ຄົນທີ່ຢູ່ເທິງແຜ່ນດິນໂລກຈະຮັບການຂ້ຽນຕີທຸກຮູບແບບເນື່ອງຈາກບົດບັນຍັດບໍລິຫານຂອງເຮົາ ແລະ ເມື່ອການຂ້ຽນຕີນີ້ລົງມາເທິງພວກເຂົາ ມະນຸດທຸກຄົນສົ່ງສຽງດັງໂວຍວາຍ ແລະ ແຕກໜີໄປທົ່ວທຸກສາລະທິດ. ໃນຊ່ວງເວລານີ້, ປະຊາຊາດເທິງແຜ່ນດິນໂລກຈະດັບສະຫຼາຍໄປທັນທີ, ຊາຍແດນລະຫວ່າງປະຊາຊາດກໍຈະບໍ່ມີຢູ່, ສະຖານທີ່ໃດໜຶ່ງຈະບໍ່ຖືກແບ່ງແຍກອອກຈາກສະຖານທີ່ແຫ່ງໜຶ່ງອີກຕໍ່ໄປ ແລະ ຈະບໍ່ມີຄວາມເຫີນຫາງລະຫວ່າງມະນຸດອີກຕໍ່ໄປ. ເຮົາເລີ່ມຕົ້ນເຮັດ "ພາລະກິດຕາມອຸດົມຄະຕິ" ໃນທ່າມກາງມະນຸດ, ເພື່ອວ່າມະນຸດຈະຢູ່ຮ່ວມນຳກັນຢ່າງສັນຕິສຸກ, ບໍ່ຕໍ່ສູ້ກັນອີກຕໍ່ໄປ ແລະ ເມື່ອເຮົາສ້າງຂົວ ແລະ ສ້າງຄວາມສຳພັນໃນທ່າມກາງມະນຸດຊາດ, ຜູ້ຄົນກໍຈະສາມັກຄີກັນ. ເຮົາຈະເຮັດໃຫ້ສະຫວັນວິມານເຕັມໄປດ້ວຍການສະແດງອອກເຖິງການກະທຳຂອງເຮົາ ແລະ ເຮັດໃຫ້ທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກຈະກົ້ມລົງຂາບຢູ່ພາຍໃຕ້ລິດອຳນາດຂອງເຮົາ, ແລ້ວນຳແຜນການຂອງເຮົາໄປປະຕິບັດເພື່ອ "ຄວາມສາມັກຄີທົ່ວໂລກ" ແລະ ເຮັດໃຫ້ຄວາມປາຖະໜາໜຶ່ງດຽວຂອງເຮົານີ້ໃຫ້ເກີດໝາກຜົນ, ເພື່ອວ່າມະນຸດຈະບໍ່ "ທ່ອງທ່ຽວໄປມາ" ເທິງໂລກອີກຕໍ່ໄປ ແຕ່ຈະຄົ້ນພົບຈຸດໝາຍປາຍທາງທີ່ເໝາະສົມໂດຍບໍ່ຊັກຊ້າ. ເຮົາຄຳນຶງເຖິງມະນຸດຊາດໃນທຸກໆທາງ, ເຮັດແບບນັ້ນກໍເພື່ອວ່າມະນຸດຊາດຈະໄດ້ດຳລົງຊີວິດຢູ່ໃນດິນແດນແຫ່ງສັນຕິສຸກ ແລະ ຄວາມສຸກໂດຍໄວ, ເພື່ອວ່າມື້ແຫ່ງຊີວິດຂອງພວກເຂົາຈະບໍ່ໂສກເສົ້າ ແລະ ໂດດດ່ຽວອີກຕໍ່ໄປ ແລະ ເພື່ອວ່າແຜນການຂອງເຮົາຈະບໍ່ສູນເປົ່າເທິງແຜ່ນດິນໂລກ. ເພາະມະນຸດຢູ່ໃນທີ່ນັ້ນ, ເຮົາຈະສ້າງປະຊາຊາດຂອງເຮົາເທິງແຜ່ນດິນໂລກ, ຍ້ອນວ່າ ສ່ວນໜຶ່ງຂອງການສະແດງອອກເຖິງສະຫງ່າລາສີຂອງເຮົາແມ່ນຢູ່ເທິງແຜ່ນດິນໂລກ. ໃນສະຫວັນເບື້ອງເທິງ, ເຮົາຈະສ້າງຕັ້ງນະຄອນຂອງເຮົາໃຫ້ຖືກຕ້ອງ ແລະ ເຮັດໃຫ້ທຸກສິ່ງໃໝ່ທັງຢູ່ເບື້ອງເທິງ ແລະ ເບື້ອງລຸ່ມ. ເຮົາຈະເຮັດໃຫ້ທຸກສິ່ງທີ່ຢູ່ທັງເບື້ອງເທິງ ແລະ ເບື້ອງລຸ່ມສະຫວັນຮ່ວມກັນເປັນໜຶ່ງດຽວ, ເພື່ອວ່າທຸກສິ່ງເທິງແຜ່ນດິນໂລກຈະຮ່ວມກັນກັບທຸກສິ່ງທີ່ຢູ່ໃນສະຫວັນ. ນີ້ແມ່ນແຜນການຂອງເຮົາ; ມັນແມ່ນສິ່ງທີ່ເຮົາຈະເຮັດໃຫ້ສຳເລັດໃນຍຸກສຸດທ້າຍ, ບໍ່ໃຫ້ຜູ້ໃດຜູ້ໜຶ່ງແຊກແຊງກັບພາກສ່ວນນີ້ໃນພາລະກິດຂອງເຮົາ! ການຂະຫຍາຍພາລະກິດຂອງເຮົາໄປສູ່ປະຊາຊາດຂອງຄົນຕ່າງຊາດແມ່ນພາກສ່ວນສຸດທ້າຍຂອງພາລະກິດຂອງເຮົາເທິງແຜ່ນດິນໂລກ. ບໍ່ມີໃຜສາມາດຢັ່ງເຖິງພາລະກິດທີ່ເຮົາຈະປະຕິບັດ ແລະ ດ້ວຍເຫດນີ້ ຜູ້ຄົນຈຶ່ງສັບສົນພໍສົມຄວນ. ແລ້ວຍ້ອນເຮົາຫຍຸ້ງກັບພາລະກິດ

ຂອງເຮົາທີ່ຢູ່ເທິງແຜ່ນດິນໂລກ, ຜູ້ຄົນຈຶ່ງຖືໂອກາດ "ເຮັດຫຼິ້ນໆ". ເພື່ອບໍ່ໃຫ້ພວກເຂົາຄວບຄຸມຍາກເກີນໄປ, ກ່ອນອື່ນ ເຮົາໄດ້ວາງພວກເຂົາໄວ້ພາຍໃຕ້ການຂ້ຽນຕີຂອງເຮົາເພື່ອອົດກັ້ນກັບການລົງວິໄນຈາກທະເລສາບແຫ່ງໄຟ. ນີ້ແມ່ນໜຶ່ງບາດກ້າວໃນພາລະກິດຂອງເຮົາ ແລະ ເຮົາຈະໃຊ້ກຳລັງຂອງທະເລສາບແຫ່ງໄຟເພື່ອເຮັດໃຫ້ພາລະກິດນີ້ຂອງເຮົາສຳເລັດລົງ; ຖ້າບໍ່ດັ່ງນັ້ນ ມັນກໍເປັນໄປບໍ່ໄດ້ທີ່ຈະປະຕິບັດພາລະກິດຂອງເຮົາ. ເຮົາຈະເຮັດໃຫ້ມະນຸດທົ່ວທັງຈັກກະວານຍອມຢູ່ພາຍໃຕ້ບັນລັງຂອງເຮົາ, ແບ່ງພວກເຂົາອອກເປັນປະເພດທີ່ແຕກຕ່າງກັນຕາມການພິພາກສາຂອງເຮົາ, ຈັດແບ່ງພວກເຂົາຕາມປະເພດເຫຼົ່ານີ້ ແລະ ຍິ່ງໄປກວ່ານັ້ນກໍຄືຈັດລຽງພວກເຂົາເຂົ້າສູ່ຄອບຄົວຂອງພວກເຂົາ, ເພື່ອວ່າມະນຸດທັງປວງຈະເຊົາບໍ່ເຊື່ອຟັງເຮົາ, ກົງກັນຂ້າມ ພວກເຂົາຈະຕົກລົງໃນການຈັດແຈງທີ່ຮຽບຮ້ອຍ ແລະ ເປັນລະບົບລະບຽບຕາມປະເພດຕ່າງໆທີ່ເຮົາໄດ້ຕັ້ງຊື່ໄວ້, ບໍ່ໃຫ້ຜູ້ໃດເຄື່ອນຍ້າຍໄປມາຕາມອຳເພີໃຈ! ທົ່ວທັງຈັກກະວານ, ເຮົາໄດ້ສ້າງພາລະກິດໃໝ່ຂຶ້ນ; ທົ່ວທັງຈັກກະວານ, ມະນຸດຊາດທັງປວງມຶນງົງ ແລະ ຕົກຕະລຶງຍ້ອນການປາກົດຕົວຢ່າງກະທັນຫັນຂອງເຮົາ, ຂອບເຂດຂອງພວກເຂົາຂະຫຍາຍອອກຢ່າງບໍ່ເຄີຍເປັນມາກ່ອນຍ້ອນການປາກົດຕົວຢ່າງເປີດເຜີຍຂອງເຮົາ. ປັດຈຸບັນບໍ່ແມ່ນແບບນີ້ແທ້ໆບໍ?

ເຮົາໄດ້ຍ່າງກ້າວທຳອິດທ່າມກາງບັນດາປະຊາຊາດ ແລະ ປະຊາຊົນທັງປວງ ແລະ ເຮົາໄດ້ເລີ່ມຕົ້ນສ່ວນທຳອິດໃນພາລະກິດຂອງເຮົາ. ເຮົາຈະບໍ່ຂັດຂວາງແຜນການຂອງເຮົາທີ່ຈະເລີ່ມຕົ້ນໃໝ່: ລຳດັບຂອງພາລະກິດທີ່ຢູ່ທ່າມກາງປະຊາຊາດຂອງຄົນຕ່າງຊາດໄດ້ຖືກສ້າງຂຶ້ນຕາມຂະບວນການພາລະກິດຂອງເຮົາທີ່ຢູ່ໃນສະຫວັນ. ເມື່ອມະນຸດທຸກຄົນຫຼຽວເບິ່ງທ່າທາງ ແລະ ການກະທຳທຸກຢ່າງຂອງເຮົາ, ນັ້ນແມ່ນຕອນທີ່ເຮົາໄດ້ໂຍນໝອກລົງມາເທິງແຜ່ນດິນໂລກ. ຕາຂອງມະນຸດມືດມົວທັນທີ ແລະ ພວກເຂົາບໍ່ສາມາດເຫັນທິດທາງໄດ້ຢ່າງຊັດເຈນ ຄືກັບແກະທີ່ຢູ່ໃນທະເລຊາຍທີ່ແຫ້ງແລ້ງ ແລະ ເມື່ອສຽງລົມພາຍຸແຮງເລີ່ມດັງຂຶ້ນ, ສຽງຮ້ອງໄຫ້ຂອງພວກເຂົາກໍຈົມຢູ່ໃນລົມທີ່ພັດມາຢ່າງແຮງ. ທ່າມກາງຄື້ນລົມ, ຮູບຮ່າງຂອງມະນຸດແມ່ນສາມາດເຫັນໄດ້ພຽງເລັກນ້ອຍ, ແຕ່ສຽງຂອງມະນຸດແມ່ນບໍ່ສາມາດໄດ້ຍິນເລີຍ ແລະ ເຖິງແມ່ນມະນຸດກຳລັງຮ້ອງຂຶ້ນສຸດແຮງ, ຄວາມພະຍາຍາມນັ້ນກໍໄຮ້ປະໂຫຍດ. ໃນເວລານີ້, ມະນຸດຮ້ອງໄຫ້ ແລະ ຄໍ່າຄວນຢ່າງແຮງ, ຫວັງວ່າຜູ້ຊ່ວຍໃຫ້ພົ້ນຈະຕົກລົງມາຈາກທ້ອງຟ້າເພື່ອນຳພາພວກເຂົາອອກຈາກທະເລຊາຍທີ່ກວ້າງໃຫຍ່ນີ້. ແຕ່ບໍ່ວ່າຄວາມເຊື່ອຂອງພວກເຂົາຈະຍິ່ງໃຫຍ່ສໍ່າໃດກໍຕາມ, ຜູ້ຊ່ວຍໃຫ້ພົ້ນກໍຍັງບໍ່ມີທ່າທີຈະເຄື່ອນໄຫວຫຍັງ ແລະ ຄວາມຫວັງຂອງມະນຸດກໍແຕກກະຈາຍ: ໄຟແຫ່ງຄວາມເຊື່ອທີ່ຖືກຈູດຂຶ້ນກໍຖືກເປົ່າໃຫ້ດັບໂດຍລົມພາຍຸທີ່ມາຈາກທະເລຊາຍ ແລະ ມະນຸດກໍນອນອ່ອນເພຍຢູ່ໃນສະຖານທີ່ໆແຫ້ງແລ້ງ ແລະ ບໍ່ມີຄົນຢູ່, ບໍ່ສາມາດຍົກກະບອງທີ່ເຜົາໄໝ້ຂຶ້ນໄດ້ອີກຕໍ່ໄປ ແລະ ເຂົາກໍລົ້ມລົງໝົດສະຕິໄປ... ເຮົາສວຍໂອກາດເອົາຊ່ວງເວລາດັ່ງກ່າວເພື່ອເຮັດໃຫ້ໜອງນໍ້າໃນທະເລຊາຍປາກົດຂຶ້ນຕໍ່ຕາຂອງມະນຸດ. ແຕ່ໃນຂະນະທີ່ຫົວໃຈຂອງເຂົາອາດດີໃຈຫຼາຍ, ຮ່າງກາຍຂອງມະນຸດກໍອ່ອນແອເກີນໄປທີ່ຈະຕອບໂຕ້ໄດ້, ອ່ອນເພຍ ແລະ ເມື່ອຍແຂນຂາ; ແລ້ວເຖິງແມ່ນເຂົາເຫັນໝາກໄມ້ທີ່ສວຍງາມກຳລັງເຕີບໃຫຍ່ຂຶ້ນໃນໜອງນໍ້າໃນທະເລຊາຍ, ເຂົາກໍຂາດກຳລັງທີ່ຈະເດັດໝາກໄມ້ເຫຼົ່ານັ້ນ, ຍ້ອນ "ຊັບພະຍາກອນພາຍໃນ" ຂອງມະນຸດແມ່ນຖືກທຳລາຍໄປໝົດ

ທຸກຢ່າງສິ້ນເຊີງ. ເຮົາເອົາສິ່ງທີ່ມະນຸດຕ້ອງການ ແລະ ສະເໜີມອບສິ່ງເຫຼົ່ານັ້ນໃຫ້ກັບເຂົາ, ແຕ່ສິ່ງທີ່ເຂົາເຮັດກໍມີພຽງຍິ້ມຊົ່ວໄລຍະສັ້ນໆ, ໃບໜ້າຂອງເຂົາບໍ່ຊື່ນບານແທ້ໆ: ທຸກກຳລັງນ້ອຍໆຂອງເຂົາໄດ້ຫາຍໄປໂດຍບໍ່ມີຮ່ອງຮອຍ, ຫາຍໄປພ້ອມກັບອາກາດທີ່ເຄື່ອນໄຫວໄປ. ດ້ວຍເຫດຜົນນີ້, ໃບໜ້າຂອງມະນຸດແມ່ນປາສະຈາກສີໜ້າໂດຍສິ້ນເຊີງ ແລະ ມີພຽງແຕ່ແສງເລັກນ້ອຍຂອງຄວາມຮັກທີ່ປະກາຍອອກມາຈາກຕາທີ່ມີຮອຍເລືອດຂອງເຂົາເທົ່ານັ້ນ, ພ້ອມກັບຄວາມເມດຕາກະລຸນາອັນອ່ອນໂຍນຄືກັບແມ່ທີ່ກຳລັງເຝົ້າເບິ່ງລູກຂອງເຂົາ. ຄັ້ງແລ້ວຄັ້ງເລົ່າ, ສົບທີ່ແຫ້ງ ແລະ ແຕກຂອງມະນຸດສະແດງທ່າທາງເໜັງຕີງ, ຄືກັບວ່າກຳລັງຈະເວົ້າແຕ່ຂາດກຳລັງທີ່ຈະເວົ້າ. ເຮົາໄດ້ມອບນໍ້າບາງສ່ວນໃຫ້ກັບມະນຸດ, ແຕ່ສິ່ງທີ່ເຂົາເຮັດກໍຄືສັ່ນຫົວຂອງເຂົາເທົ່ານັ້ນ. ຈາກການກະທຳທີ່ບໍ່ປົກກະຕິ ແລະ ຄາດການບໍ່ໄດ້ເຫຼົ່ານີ້, ເຮົາຮຽນຮູ້ວ່າມະນຸດໄດ້ສູນເສຍຄວາມຫວັງທຸກຢ່າງໃນຕົວເຂົາເອງແລ້ວ ແລະ ພຽງແຕ່ຫຼຽວເບິ່ງເຮົາດ້ວຍແວວຕາອ້ອນວອນ, ຄືກັບວ່າກຳລັງອ້ອນວອນຂໍບາງສິ່ງ. ແຕ່ຍ້ອນບໍ່ຮູ້ຈັກປະເພນີ ແລະ ວັດທະນະທຳຂອງມະນຸດຊາດ, ເຮົາຈຶ່ງສັບສົນກັບສີໜ້າ ແລະ ການກະທຳຂອງມະນຸດ. ໃນຊ່ວງເວລານີ້ເອງ ເຮົາຄົ້ນພົບທັນທີທັນໃດວ່າ ມື້ແຫ່ງການເປັນຢູ່ຂອງມະນຸດກຳລັງມາເຖິງຕອນຈົບຢ່າງໄວວາ ແລະ ເຮົາໄດ້ຈ້ອງເບິ່ງເຂົາຢ່າງເຫັນອົກເຫັນໃຈ. ແລ້ວນໃຊ່ວງເວລານີ້ເອງ ມະນຸດສະແດງຮອຍຍິ້ມແຫ່ງຄວາມສຸກ, ງຶກຫົວຂອງເຂົາໃສ່ເຮົາ, ຄືກັບວ່າເຂົາໄດ້ສຳເລັດຄວາມປາຖະໜາທຸກຢ່າງຂອງເຂົາແລ້ວ. ມະນຸດຊາດບໍ່ໂສກເສົ້າອີກຕໍ່ໄປ; ເທິງແຜ່ນດິນໂລກ ຜູ້ຄົນບໍ່ຕໍ່ວ່າກ່ຽວກັບຄວາມວ່າງເປົ່າໃນຊີວິດອີກຕໍ່ໄປ ແລະ ຢຸດຈາກຄວາມສຳພັນທຸກຢ່າງກັບ "ຊີວິດ". ຈາກນັ້ນມາ, ຈະບໍ່ມີການຖອນຫາຍໃຈເທິງແຜ່ນດິນໂລກອີກຕໍ່ໄປ ແລະ ມື້ທີ່ມະນຸດຊາດຈະດຳລົງຊີວິດຢູ່ກໍຈະເຕັມໄປດ້ວຍຄວາມປິຕິຍິນດີ...

ເຮົາຈະເປີດໂປງເລື່ອງຕ່າງໆຂອງມະນຸດຢ່າງເໝາະສົມກ່ອນທີ່ຈະເລີ່ມຕົ້ນພາລະກິດຂອງເຮົາເອງ, ເພື່ອບໍ່ໃຫ້ມະນຸດລ່ວງລໍ້າພາລະກິດຂອງເຮົາຢ່າງສະເໝີ. ສຳລັບເຮົາ, ເລື່ອງຕ່າງໆຂອງມະນຸດບໍ່ແມ່ນບັນຫາສຳຄັນ; ເລື່ອງຕ່າງໆຂອງມະນຸດຊາດແມ່ນເລັກນ້ອຍເກີນໄປ. ເພາະມະນຸດມີຈິດວິນຍານທີ່ນ້ອຍຫຼາຍ, ມັນຈຶ່ງປາກົດວ່າມະນຸດຊາດບໍ່ເຕັມໃຈທີ່ຈະສະແດງຄວາມເມດຕາແມ່ນແຕ່ກັບມົດ ຫຼື ມົດເປັນສັດຕູຂອງມະນຸດຊາດ, ມີຄວາມຂັດແຍ່ງກັນຢູ່ທ່າມກາງມະນຸດສະເໝີ. ເມື່ອໄດ້ຟັງຄວາມຂັດແຍ່ງຂອງມະນຸດ, ເຮົາຈຶ່ງຈາກໄປອີກຄັ້ງໜຶ່ງ ແລະ ບໍ່ໃສ່ໃຈກັບເລື່ອງລາວຂອງພວກເຂົາອີກຕໍ່ໄປ. ໃນສາຍຕາຂອງມະນຸດ, ເຮົາເປັນ "ກຳມະການຂອງຜູ້ຢູ່ອາໄສ" ເຊິ່ງຊ່ຽວຊານໃນການແກ້ໄຂ "ຂໍ້ຂັດແຍ້ງໃນຄອບຄົວ" ທີ່ຢູ່ທ່າມກາງ "ຜູ້ຢູ່ອາໄສ". ເມື່ອຜູ້ຄົນມາຢູ່ຕໍ່ໜ້າເຮົາ, ພວກເຂົາກໍນຳເຫດຜົນຂອງພວກເຂົາເອງມາພ້ອມຢູ່ສະເໝີ ແລະ ເລົ່າເລື່ອງ "ປະສົບການທີ່ບໍ່ທຳມະດາ" ຂອງພວກເຂົາເອງດ້ວຍຄວາມກະຕືລືລົ້ນຢ່າງສູງ, ໂດຍເພີ່ມຄຳບັນຍາຍຂອງພວກເຂົາເອງໄປພ້ອມໆກັນ. ເຮົາຫຼຽວເບິ່ງການປະພຶດຕົວຢ່າງພິເສດຂອງມະນຸດ: ໃບໜ້າຂອງພວກເຂົາຖືກປົກຄຸມດ້ວຍຂີ້ຝຸ່ນ ເຊິ່ງເປັນຂີ້ຝຸ່ນທີ່ຢູ່ພາຍໃຕ້ "ການຫຼັ່ງໄຫຼ" ຂອງເຫື່ອ, ສູນເສຍ "ຄວາມເປັນອິດສະຫຼະ" ຂອງມັນໃນຂະນະທີ່ມັນເຮັດໃຫ້ເກີດສານປະສົມກັບເຫື່ອ, ໃບໜ້າຂອງມະນຸດກໍ່ "ອຸດົມສົມບູນ" ຂຶ້ນຕື່ມ, ຄືກັບດິນຊາຍທີ່ຢູ່ເທິງ

ຫາດຊາຍແຄມທະເລ, ເຊິ່ງສາມາດເຫັນຮອຍຕີນໄດ້ໃນບາງຄັ້ງບາງຄາວ. ຜົມຂອງພວກເຂົາຄ້າຍກັນກັບຜົມຂອງວິນຍານຂອງຄົນທີ່ຕາຍແລ້ວ, ປາສະຈາກແສງເຫຼື້ອມແວວວາວ, ຢືນກົງຄືກັບເຟືອງຈຳນວນນ້ອຍໆທີ່ຖືກຢັດເຂົ້າໃສ່ໜ່ວຍໂລກ. ຍ້ອນອາລົມຂອງເຂົາຮ້ອນເກີນໄປ, ຈົນຜົມທຸກເສັ້ນຂອງເຂົາລຸກຂຶ້ນດ້ວຍຄວາມໂກດຮ້າຍ, ໃບໜ້າຂອງເຂົາປ່ອຍ "ອາຍ" ອອກມາເປັນບາງຄັ້ງບາງຄາວ, ຄືກັບວ່າເຫື່ອຂອງເຂົາ "ກຳລັງຟົດ". ເມື່ອໄດ້ວິເຄາະເຂົາຢ່າງໃກ້ຊິດ, ເຮົາເຫັນວ່າໜ້າຂອງມະນຸດແມ່ນເຕັມໄປດ້ວຍ "ແປວໄຟ" ຄືກັບດວງຕາເວັນທີ່ເຜົາໄໝ້ ເຊິ່ງນັ້ນກໍຄືເຫດຜົນທີ່ວ່າເປັນຫຍັງຈຶ່ງມີແກ໊ສອອກມາຈາກໃບໜ້າ ແລະ ເຮົາກໍກັງວົນແທ້ໆວ່າຄວາມໃຈຮ້າຍຂອງເຂົາອາດຈະເຜົາໄໝ້ໜ້າຂອງເຂົາ, ເຖິງແມ່ນເຂົາເອງບໍ່ໄດ້ສົນໃຈກັບສິ່ງນີ້. ໃນຈຸດນີ້, ເຮົາກະຕຸ້ນໃຫ້ມະນຸດຜ່ອນອາລົມຂອງເຂົາລົງໜ້ອຍໜຶ່ງ, ຍ້ອນສິ່ງນີ້ຈະມີປະໂຫຍດຫຍັງ? ເປັນຫຍັງຈຶ່ງທໍລະມານຕົນເອງແບບນັ້ນ? ຍ້ອນຄວາມໃຈຮ້າຍ, ກ້ານເຟືອງທີ່ຢູ່ເທິງໜ້າຂອງ "ໜ່ວຍໂລກ" ນີ້ແມ່ນຖືກເຜົາໄໝ້ດ້ວຍແປວໄຟຂອງດວງຕາເວັນແທ້ໆ; ໃນສະຖານະການແບບນີ້, ແມ່ນແຕ່ "ດວງເດືອນ" ກໍກາຍເປັນສີແດງ. ເຮົາກະຕຸ້ນໃຫ້ມະນຸດຫຼຸດຜ່ອນອາລົມຂອງເຂົາລົງ, ມັນສຳຄັນທີ່ຈະປົກປ້ອງສຸຂະພາບຂອງເຂົາ. ແຕ່ມະນຸດບໍ່ຟັງຄຳແນະນຳຂອງເຮົາ; ກົງກັນຂ້າມ ເຂົາສືບຕໍ່ "ຕໍ່ວ່າ" ເຮົາ. ສິ່ງນີ້ຈະມີປະໂຫຍດຫຍັງ? ຄວາມໃຈບຸນຂອງເຮົາບໍ່ພຽງພໍໃຫ້ມະນຸດໄດ້ເພີດເພີນບໍ? ຫຼື ມະນຸດປະຕິເສດສິ່ງທີ່ເຮົາໄດ້ມອບໃຫ້ກັບເຂົາບໍ? ດ້ວຍຄວາມໃຈຮ້າຍຢ່າງກະທັນຫັນ, ເຮົາປີ້ນໂຕະ ແລະ ມະນຸດບໍ່ກ້າບັນຍາຍເພີ່ມເຕີມສິ່ງທີ່ເປັນຕາຕື່ນເຕັ້ນຈາກເລື່ອງລາວຂອງເຂົາອີກຕໍ່ໄປ; ເຂົາຢ້ານວ່າເຮົາອາດຈະນຳພາເຂົາເຂົ້າສູ່ "ສູນກັກຂັງ" ເພື່ອເຮັດໃຫ້ສິ້ນບ່ອງຂອງເຂົາເຢັນລົງຈັກສອງສາມມື້ ແລະ ເຂົາກໍສວຍໂອກາດທີ່ເຮົາໂກດຮ້າຍເພື່ອຫຼົບໜີໄປຢ່າງງຽບໆ. ຖ້າບໍ່ດັ່ງນັ້ນມະນຸດຈະບໍ່ເຕັມໃຈປ່ອຍໃຫ້ເລື່ອງລາວມັນຈົບສິ້ນລົງຈັກເທື່ອ, ແຕ່ຈະສືບຕໍ່ເວົ້າໄປເລື້ອຍກ່ຽວກັບຄວາມກັງວົນຂອງເຂົາເອງ. ສຽງຈາກການເວົ້າໄປເລື້ອຍນີ້ເຮັດໃຫ້ເຮົາໃຈຮ້າຍຫຼາຍ. ເປັນຫຍັງມະນຸດຈຶ່ງສັບສົນຫຼາຍໃນສ່ວນເລິກຂອງຫົວໃຈຂອງພວກເຂົາ? ເປັນໄປໄດ້ບໍວ່າຍ້ອນເຮົາໄດ້ໃສ່ "ອົງປະກອບ" ຫຼາຍເກີນໄປເຂົ້າໃນມະນຸດ? ເປັນຫຍັງເຂົາຈຶ່ງທຳທ່າສະແດງເມື່ອຢູ່ຕໍ່ໜ້າເຮົາຢູ່ສະເໝີ? ແນ່ນອນ ມັນບໍ່ແມ່ນວ່າເຮົາເປັນ "ທີ່ປຶກສາ" ເພື່ອແກ້ໄຂ "ຂໍ້ຂັດແຍ້ງໃນສັງຄົມ" ແມ່ນບໍ? ເຮົາຂໍໃຫ້ມະນຸດມາຫາເຮົາບໍ? ແນ່ນອນ ເຮົາບໍ່ແມ່ນຜູ້ພິພາກສາຂອງເຂດປົກຄອງໃດໜຶ່ງ ແມ່ນບໍ? ເປັນຫຍັງເລື່ອງລາວຕ່າງໆຂອງຜູ້ຄົນຈຶ່ງຖືກລາຍງານຕໍ່ໜ້າເຮົາຢູ່ສະເໝີ? ເຮົາຫວັງວ່າ ມະນຸດຈະເຫັນເຖິງຄວາມເໝາະສົມໃນການຄວບຄຸມຕົນເອງ ແລະ ບໍ່ລົບກວນເຮົາ, ເພາະເຮົາກໍມີພາລະກິດຫຼາຍຢ່າງໃຫ້ປະຕິບັດເຊັ່ນກັນ.

ວັນທີ 18 ພຶດສະພາ 1992

# ບົດທີ 44

ຜູ້ຄົນປະຕິບັດຕໍ່ພາລະກິດຂອງເຮົາເປັນພຽງສິ່ງປະກອບ; ພວກເຂົາບໍ່ໄດ້ສະຫຼະອາຫານ ຫຼື ການຫຼັບນອນເພື່ອເຫັນແກ່ພາລະກິດຂອງເຮົາ, ດ້ວຍເຫດນັ້ນ ເຮົາຈຶ່ງບໍ່ມີທາງເລືອກ ນອກຈາກຮຽກຮ້ອງຢ່າງເໝາະສົມຈາກມະນຸດຕາມຄວາມເໝາະສົມຕໍ່ທັດສະນະຄະຕິທີ່ເຂົາມີຕໍ່ເຮົາ. ເຮົາຈື່ໄດ້ວ່າ ຄັ້ງໜຶ່ງ ເຮົາໄດ້ມອບພຣະຄຸນ ແລະ ພອນຢ່າງຫຼວງຫຼາຍໃຫ້ແກ່ມະນຸດ ແຕ່ຫຼັງຈາກທີ່ໄດ້ຄວ້າເອົາສິ່ງເຫຼົ່ານີ້ແລ້ວ ເຂົາກໍຈາກເຮົາໄປໃນທັນທີ. ມັນເປັນຄືກັບວ່າ ເຮົາໄດ້ມອບສິ່ງເຫຼົ່ານັ້ນໃຫ້ກັບເຂົາໂດຍບໍ່ຮູ້ສຶກຕົວ. ດ້ວຍເຫດນັ້ນ ມະນຸດຈຶ່ງຮັກເຮົາດ້ວຍວິທີການແນວຄິດຂອງພວກເຂົາເອງຢູ່ສະເໝີ. ເຮົາຕ້ອງການໃຫ້ມະນຸດຮັກເຮົາຢ່າງແທ້ຈິງ; ເຖິງຢ່າງໃດກໍຕາມ ໃນປັດຈຸບັນ ຜູ້ຄົນຍັງຊັກຊ້າເສຍເວລາໂດຍບໍ່ສາມາດມອບຄວາມຮັກຢ່າງແທ້ຈິງຂອງພວກເຂົາໃຫ້ກັບເຮົາ. ໃນຈິນຕະນາການຂອງພວກເຂົາ, ພວກເຂົາເຊື່ອວ່າ ຖ້າພວກເຂົາມອບຄວາມຮັກທີ່ແທ້ຈິງຂອງພວກເຂົາໃຫ້ກັບເຮົາ ພວກເຂົາຈະບໍ່ມີຫຍັງເຫຼືອເລີຍ. ເມື່ອເຮົາຄັດຄ້ານ, ຮ່າງກາຍທັງໝົດຂອງພວກເຂົາກໍສັ່ນເຊັນດ້ວຍຄວາມຢ້ານກົວ, ແຕ່ພວກເຂົາຍັງບໍ່ເຕັມໃຈທີ່ຈະມອບຄວາມຮັກທີ່ແທ້ຈິງຂອງພວກເຂົາໃຫ້ກັບເຮົາ. ມັນເປັນຄືກັບວ່າພວກເຂົາກຳລັງລໍຖ້າບາງຢ່າງ, ດ້ວຍເຫດນັ້ນ ພວກເຂົາຈຶ່ງເບິ່ງໄປທາງໜ້າ ໂດຍບໍ່ເຄີຍບອກຄວາມຈິງຂອງສິ່ງທີ່ກຳລັງເກີດຂຶ້ນຕໍ່ເຮົາ. ມັນຄ້າຍຄືກັບວ່າ ມີເທັບຕິດປາກຂອງພວກເຂົາ ດັ່ງນັ້ນ ການເວົ້າຂອງພວກເຂົາຈຶ່ງລັງເລຢູ່ຕະຫຼອດເວລາ. ມັນເບິ່ງຄືກັບວ່າ ເຮົາໄດ້ກາຍເປັນນາຍທຶນທີ່ໂຫດຮ້າຍຢູ່ຕໍ່ໜ້າມະນຸດ. ຜູ້ຄົນແມ່ນຢ້ານເຮົາສະເໝີ: ເມື່ອເຫັນເຮົາ, ພວກເຂົາຈະຫາຍໄປທັນທີຢ່າງບໍ່ມີຮ່ອງຮອຍໂດຍຢ້ານວ່າເຮົາຈະຖາມພວກເຂົາກ່ຽວກັບສະຖານະການຂອງພວກເຂົາ. ເຮົາບໍ່ຮູ້ເຫດຜົນວ່າ ເປັນຫຍັງຜູ້ຄົນຈຶ່ງສາມາດຮັກ "ຄົນບ້ານດຽວກັນ" ຂອງພວກເຂົາຢ່າງຈິງໃຈ ແຕ່ບໍ່ສາມາດຮັກເຮົາ ຜູ້ທີ່ມີຈິດໃຈທີ່ທ່ຽງທຳ. ຍ້ອນສິ່ງນີ້ ເຮົາຈຶ່ງຖອນຫາຍໃຈ: ເປັນຫຍັງຜູ້ຄົນຈຶ່ງປ່ອຍຄວາມຮັກຂອງພວກເຂົາຢູ່ໃນໂລກມະນຸດຕະຫຼອດເວລາ? ເປັນຫຍັງເຮົາຈຶ່ງບໍ່ສາມາດຊີມລົດຊາດຄວາມຮັກຂອງມະນຸດ? ມັນເປັນຍ້ອນວ່າ ເຮົາບໍ່ແມ່ນໜຶ່ງໃນມະນຸດບໍ? ຜູ້ຄົນປະຕິບັດຕໍ່ເຮົາຄືກັບເປັນສິ່ງທີ່ປ່າເຖື່ອນຈາກພູເຂົາຕະຫຼອດເວລາ. ມັນເປັນຄືກັບວ່າ ເຮົາຂາດສ່ວນປະກອບທັງໝົດທີ່ສ້າງໃຫ້ເປັນຄົນປົກກະຕິ ແລະ ດ້ວຍເຫດນັ້ນ ເມື່ອຢູ່ຕໍ່ໜ້າເຮົາ ຜູ້ຄົນເວົ້າດ້ວຍນ້ຳສຽງທີ່ມີສົນທຳຢ່າງສູງຢູ່ສະເໝີ. ພວກເຂົາມັກດຶງເຮົາໄປຢູ່ຕໍ່ໜ້າພວກເຂົາ ເພື່ອຕຳນິເຮົາ, ຮ້າຍເຮົາປານກັບຮ້າຍເດັກນ້ອຍນັກຮຽນອະນຸບານ; ຜູ້ຄົນເຮັດບົດບາດໃນການເປັນຜູ້ໃຫ້ການສຶກສາຕໍ່ໜ້າເຮົາຢູ່ສະເໝີ ຍ້ອນວ່າໃນຄວາມຊົງຈຳຂອງພວກເຂົາເຮົາເປັນຄົນທີ່ບໍ່ມີເຫດຜົນ ແລະ ບໍ່ມີການສຶກສາ. ເຮົາບໍ່ຂ້ຽນຕີຜູ້ຄົນຍ້ອນຄວາມລົ້ມເຫຼວຂອງພວກເຂົາ ແຕ່ໃຫ້ການຊ່ວຍເຫຼືອທີ່ເໝາະສົມແກ່ພວກເຂົາ ແລ້ວເຮັດໃຫ້ພວກເຂົາໄດ້ຮັບ "ການຊ່ວຍເຫຼືອດ້ານເສດຖະກິດ" ທີ່ເປັນປົກກະຕິ. ຍ້ອນມະນຸດດຳລົງຊີວິດໃນທ່າມກາງໄພພິບັດຕະຫຼອດ ແລະ ພົບເຫັນວ່າ ມັນລຳບາກທີ່ຈະຫຼົບໜີ ແລະ ໃນທ່າມກາງຄວາມພິນາດນີ້ ເຂົາໄດ້ເອີ້ນຫາເຮົາຕະຫຼອດ, ເຮົາມອບ "ສະບຽງເຂົ້າສານ" ໃສ່ມືຂອງເຂົາໄດ້ທັນເວລາ ເຮັດໃຫ້ທຸກຄົນດຳລົງຊີວິດໃນ

ຄອບຄົວທີ່ດີຂອງຍຸກໃໝ່ ແລະ ປະສົບກັບຄວາມອົບອຸ່ນໃນຄອບຄົວທີ່ດີ. ເມື່ອເຮົາສັງເກດເບິ່ງພາລະກິດໃນທ່າມກາງມະນຸດ ເຮົາໄດ້ຄົ້ນພົບຂໍ້ບົກຜ່ອງຂອງມະນຸດຫຼາຍຢ່າງ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໃຫ້ຄວາມຊ່ວຍເຫຼືອແກ່ເຂົາ. ແມ່ນແຕ່ໃນເວລານີ້ ຍັງມີຄວາມທຸກຍາກຢ່າງໃຫຍ່ຫຼວງໃນທ່າມກາງມະນຸດ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ມອບການເບິ່ງແຍງຢ່າງເໝາະສົມສຳລັບ “ພື້ນທີ່ດ້ອຍພັດທະນາ” ໂດຍຍົກພວກເຂົາຂຶ້ນຈາກຄວາມທຸກຍາກ. ນີ້ແມ່ນວິທີການທີ່ເຮົາປະຕິບັດພາລະກິດ ໂດຍເຮັດໃຫ້ທຸກຄົນມີຄວາມສຸກກັບພຣະຄຸນຂອງເຮົາໃຫ້ຫຼາຍທີ່ສຸດເທົ່າທີ່ພວກເຂົາຈະສາມາດມີໄດ້.

ຜູ້ຄົນເທິງແຜ່ນດິນໂລກແມ່ນທົນທຸກກັບການຂ້ຽນຕີໂດຍບໍ່ຮູ້ຕົວ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງອ້າມືອັນຍິ່ງໃຫຍ່ຂອງເຮົາອອກ ແລະ ດຶງພວກເຂົາມາຢູ່ຂ້າງເຮົາ ໂດຍເຮັດໃຫ້ພວກເຂົາໄດ້ຮັບໂອກາດທີ່ດີເພື່ອມີຄວາມສຸກກັບພຣະຄຸນຂອງເຮົາຢູ່ເທິງແຜ່ນດິນໂລກ. ເທິງແຜ່ນດິນໂລກ ມີສິ່ງໃດແດ່ທີ່ບໍ່ເປົ່າວ່າງ ແລະ ປາສະຈາກຄຸນຄ່າ? ເຮົາຍ່າງໃນທຸກຫົນແຫ່ງໃນໂລກມະນຸດ ແລະ ເຖິງແມ່ນວ່າ ຈະມີອານຸສາວະລີທີ່ໂດ່ງດັງ ແລະ ທິວທັດທຳມະຊາດທີ່ໜ້າພໍໃຈຢ່າງຫຼວງຫຼາຍ ທຸກບ່ອນທີ່ເຮົາໄປແມ່ນໄດ້ສູນເສຍພະລັງແຫ່ງຊີວິດແຕ່ດົນນານແລ້ວ. ໃນເມື່ອນັ້ນເອງ ເຮົາຈຶ່ງຮູ້ສຶກວ່າໂລກເສົ້າໝອງ ແລະ ສິ້ນຫວັງ: ເທິງແຜ່ນດິນໂລກ ຊີວິດໄດ້ຫາຍໄປແຕ່ດົນນານແລ້ວ, ຍັງເຫຼືອພຽງແຕ່ກິ່ນອາຍແຫ່ງຄວາມຕາຍ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ຮຽກຮ້ອງໃຫ້ມະນຸດຮີບຟ້າວອອກຈາກດິນແດນແຫ່ງຄວາມເຈັບປວດນີ້. ສິ່ງທີ່ເຮົາເຫັນແມ່ນມີພຽງແຕ່ກິ່ນອາຍແຫ່ງຄວາມວ່າງເປົ່າ. ເຮົາຖືເອົາໂອກາດນີ້ໂຍນຊີວິດທີ່ຢູ່ໃນມືຂອງເຮົາໃຫ້ຜູ້ທີ່ເຮົາໄດ້ເລືອກ; ທັນທີທັນໃດກໍມີພື້ນທີ່ສີຂຽວຢູ່ເທິງດິນແດນ. ຜູ້ຄົນແມ່ນເຕັມໃຈທີ່ຈະມີຄວາມສຸກກັບສິ່ງທີ່ມີຊີວິດຊີວາເທິງແຜ່ນດິນໂລກ ແຕ່ເຮົາບໍ່ພົບເຫັນຄວາມສຸກໃນສິ່ງນີ້; ຜູ້ຄົນຖະໜຸຖະໜອມສິ່ງຕ່າງໆເທິງແຜ່ນດິນໂລກ ແລະ ບໍ່ເຄີຍເຫັນຄວາມເປົ່າວ່າງຂອງຕົວເອງ ຈົນມາເຖິງຈຸດນີ້ໃນປັດຈຸບັນ ພວກເຂົາກໍຍັງບໍ່ເຂົ້າໃຈວ່າ ເປັນຫຍັງຈຶ່ງບໍ່ມີຊີວິດຢູ່ເທິງແຜ່ນດິນໂລກ. ໃນປັດຈຸບັນນີ້ ໃນຂະນະທີ່ເຮົາຍ່າງພາຍໃນຈັກກະວານ ຜູ້ຄົນແມ່ນສາມາດມີຄວາມສຸກກັບພຣະຄຸນຂອງເຮົາໃນສະຖານທີ່ໆເຮົາອາໄສຢູ່ ແລະ ພວກເຂົາຖືເອົາສິ່ງນີ້ເປັນຊັບສິນໂດຍບໍ່ເຄີຍສະແຫວງຫາແຫຼ່ງທີ່ມາຂອງຊີວິດຈັກເທື່ອ. ພວກເຂົາທຸກຄົນໃຊ້ສິ່ງທີ່ເຮົາມອບໃຫ້ເປັນຊັບສິນ ແຕ່ບໍ່ມີຜູ້ໃດໃນບັນດາພວກເຂົາ ພະຍາຍາມປະຕິບັດໜ້າທີ່ດັ້ງເດີມທີ່ມີຊີວິດຊີວາ. ພວກເຂົາບໍ່ຮູ້ຈັກວິທີໃຊ້ ຫຼື ພັດທະນາຊັບພະຍາກອນທຳມະຊາດ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຖືກປ່ອຍໃຫ້ສິ້ນຫວັງ. ເຮົາອາໄສໃນທ່າມກາງມະນຸດ, ເຮົາດຳລົງຊີວິດໃນທ່າມກາງມະນຸດ ແຕ່ໃນປັດຈຸບັນ ມະນຸດຍັງບໍ່ຮູ້ຈັກເຮົາ. ເຖິງແມ່ນວ່າ ຜູ້ຄົນໄດ້ໃຫ້ການຊ່ວຍເຫຼືອຫຼາຍຢ່າງແກ່ເຮົາ ຍ້ອນວ່າເຮົາຢູ່ຫ່າງໄກຈາກເຮືອນຊານ, ມັນກໍຄືກັບວ່າ ເຮົາຍັງບໍ່ໄດ້ສ້າງມິດຕະພາບທີ່ຖືກຕ້ອງກັບມະນຸດ ແລະ ດ້ວຍເຫດນັ້ນເຮົາຈຶ່ງຍັງຮູ້ສຶກເຖິງຄວາມບໍ່ຍຸຕິທຳຂອງໂລກມະນຸດ; ໃນທີ່ສຸດແລ້ວ ໃນສາຍຕາຂອງເຮົາ ມະນຸດຊາດແມ່ນເປົ່າວ່າງ ແລະ ບໍ່ມີສິ່ງທີ່ມີຄຸນຄ່າໃດໆໃນທ່າມກາງມະນຸດ. ເຮົາບໍ່ຮູ້ວ່າ ຜູ້ຄົນມີມຸມມອງແນວໃດກ່ຽວກັບຊີວິດຂອງມະນຸດ ແຕ່ໂດຍລວມແລ້ວ ມຸມມອງຂອງເຮົາແມ່ນບໍ່ສາມາດແຍກອອກຈາກຄຳວ່າ “ເປົ່າວ່າງ” ໄດ້. ເຮົາຫວັງວ່າ ຜູ້ຄົນຈະບໍ່ຄິດໃນທາງທີ່ບໍ່ດີກ່ຽວກັບເຮົາຍ້ອນສິ່ງນີ້, ຍ້ອນເຮົາກົງໄປ

ກົງມາ ແລະ ເຮົາບໍ່ພະຍາຍາມເປັນຄົນສຸພາບ. ແຕ່ຢ່າງໃດກໍຕາມ ເຮົາຂໍແນະນຳຜູ້ຄົນໃຫ້ເອົາໃຈໃສ່ຫຼາຍຂຶ້ນຕໍ່ສິ່ງທີ່ເຮົາຄິດ ເນື່ອງຈາກວ່າ ໃນທີ່ສຸດແລ້ວ ພຣະທຳຂອງເຮົາແມ່ນມີປະໂຫຍດກັບພວກເຂົາ. ເຮົາບໍ່ຮູ້ວ່າ ຜູ້ຄົນມີຄວາມເຂົ້າໃຈຫຍັງແດ່ກ່ຽວກັບ "ຄວາມເປົ່າວ່າງ". ຄວາມຫວັງຂອງເຮົາກໍຄື ໃຫ້ພວກເຂົາໃຊ້ຄວາມພະຍາຍາມໜ້ອຍໜຶ່ງກັບພາລະກິດນີ້. ພວກເຂົາຈະປະສົບກັບຊີວິດໃນລັກສະນະຕົວຈິງໄດ້ເປັນຢ່າງດີ ແລະ ເບິ່ງວ່າ ພວກເຂົາຈະສາມາດພົບເຫັນ "ແຮ່ທາດ" ທີ່ມີຄ່າໃນສິ່ງນີ້ໄດ້ ຫຼື ບໍ່. ເຮົາບໍ່ໄດ້ພະຍາຍາມຂັດຂວາງຄວາມຄິດບວກຂອງຜູ້ຄົນ; ເຮົາພຽງແຕ່ຕ້ອງການໃຫ້ພວກເຂົາໄດ້ຮັບຄວາມຮູ້ບາງຢ່າງກ່ຽວກັບພຣະທຳຂອງເຮົາ. ເຮົາຟ້າວເຮັດນັ້ນເຮັດນີ້ເພື່ອເຫັນແກ່ເລື່ອງຂອງມະນຸດສະເໝີ ແຕ່ໃນຕອນນີ້ເມື່ອທຸກສິ່ງເປັນແບບນີ້, ຜູ້ຄົນກໍຍັງບໍ່ໄດ້ກ່າວຄຳຂອບໃຈ ຄືກັບວ່າ ພວກເຂົາຫຍຸ້ງເກີນໄປ ແລະ ໄດ້ລືມສິ່ງນີ້ໄປແລ້ວ. ແມ່ນແຕ່ໃນປັດຈຸບັນ ເຮົາຍັງບໍ່ເຂົ້າໃຈວ່າ ການຫຍຸ້ງວຽກໝົດມື້ຂອງມະນຸດແມ່ນມີຜົນປະໂຫຍດຫຍັງແດ່. ຈົນຮອດປັດຈຸບັນ ເຮົາຍັງບໍ່ມີພື້ນທີ່ໃນຫົວໃຈຂອງຜູ້ຄົນ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ຄິດຫຼາຍອີກຄັ້ງ. ເຮົາໄດ້ເລີ່ມຕັ້ງໃຈທີ່ຈະເຮັດພາລະກິດເພື່ອຄົ້ນຄວ້າກ່ຽວກັບສາເຫດທີ່ວ່າ "ເປັນຫຍັງຜູ້ຄົນຈຶ່ງບໍ່ມີຫົວໃຈທີ່ຮັກເຮົາຢ່າງແທ້ຈິງ". ເຮົາຈະຍົກມະນຸດຂຶ້ນໃສ່ "ໂຕະຜ່າຕັດ", ເຮົາຈະຜ່າແຍກ "ຫົວໃຈ" ຂອງເຂົາຢ່າງລະອຽດ ແລະ ເບິ່ງສິ່ງທີ່ກີດກັ້ນຫົວໃຈຂອງເຂົາ ແລະ ສິ່ງທີ່ຢຸດເຂົາບໍ່ໃຫ້ຮັກເຮົາຢ່າງແທ້ຈິງ. ເມື່ອຢູ່ພາຍໃຕ້ລິດຂອງ "ມີດ", ຜູ້ຄົນຫຼັບຕາລົງສະໜິດ, ລໍຖ້າໃຫ້ເຮົາເລີ່ມລົງມື ຍ້ອນວ່າ ໃນຕອນນີ້ ພວກເຂົາໄດ້ຍອມຈຳນົນຢ່າງສິ້ນເຊີງ; ໃນຫົວໃຈຂອງພວກເຂົາ ເຮົາໄດ້ພົບເຫັນສິ່ງເຈືອປົນອື່ນຈຳນວນຫຼາຍ. ສິ່ງຫຼັກໆແມ່ນສິ່ງຕ່າງໆຂອງພວກເຂົາເອງ. ເຖິງແມ່ນວ່າ ພວກເຂົາອາດຈະມີສິ່ງຂອງໜ້ອຍໜຶ່ງນອກຮ່າງກາຍຂອງພວກເຂົາ, ສິ່ງເຫຼົ່ານັ້ນທີ່ຢູ່ພາຍໃນຮ່າງກາຍຂອງພວກເຂົາແມ່ນຫຼາຍຈົນນັບບໍ່ຖ້ວນ. ມັນເປັນຄືກັບວ່າ ຫົວໃຈຂອງມະນຸດແມ່ນກ່ອງເກັບເຄື່ອງທີ່ໃຫຍ່ຫຼາຍ, ເຕັມໄປດ້ວຍຄວາມຮັ່ງມີ ແລະ ທຸກສິ່ງທີ່ຜູ້ຄົນຕ້ອງການ. ໃນຊ່ວງເວລານີ້ເອງ ເຮົາຈຶ່ງເຂົ້າໃຈວ່າ ເປັນຫຍັງຜູ້ຄົນຈຶ່ງບໍ່ເຄີຍນັບຖືເຮົາ: ມັນເປັນຍ້ອນວ່າ ພວກເຂົາມີຄວາມພຽງພໍໃນຕົນເອງຫຼາຍ, ແລ້ວພວກເຂົາມີຄວາມຈຳເປັນຫຍັງສຳລັບການຊ່ວຍເຫຼືອຂອງເຮົາ? ດ້ວຍເຫດນັ້ນ ເຮົາຈຶ່ງຈາກມະນຸດໄປ ເນື່ອງຈາກຜູ້ຄົນບໍ່ມີຄວາມຈຳເປັນສຳລັບການຊ່ວຍເຫຼືອຂອງເຮົາ; ເຫດໃດເຮົາຄວນ "ປະພຶດຢ່າງບໍ່ມີຢາງອາຍ" ແລະ ເຮັດໃຫ້ພວກເຂົາຊັງເຮົາ?

ມີໃຜຮູ້ແດ່ວ່າ ເປັນຫຍັງເຮົາຈຶ່ງເຕັມໃຈເວົ້າໃນທ່າມກາງມະນຸດສະເໝີ ຄືກັບວ່າເຮົາບໍ່ສາມາດຊ່ວຍຕົນເອງໄດ້. ສະນັ້ນ, ຜູ້ຄົນຈຶ່ງເບິ່ງເຮົາຄືກັບວ່າບໍ່ມີຄ່າ ແລະ ພວກເຂົາປະຕິບັດຕໍ່ເຮົາຄືກັບວ່າເຮົາມີຄຸນຄ່າໜ້ອຍກວ່າຫຼຽນທອງແດງ; ພວກເຂົາບໍ່ໄດ້ປະຕິບັດຕໍ່ເຮົາຄືກັບເປັນສິ່ງທີ່ຕ້ອງເຄົາລົບນັບຖື. ພວກເຂົາບໍ່ຖະໜຸຖະໜອມເຮົາ ແລະ ພວກເຂົາດຶງເຮົາເມືອເຮືອນໃນເວລາໃດກໍໄດ້ທີ່ພວກເຂົາຕ້ອງການ ແລະ ຫຼັງຈາກນັ້ນກໍໂຍນເຮົາຖິ້ມອີກຄັ້ງໂດຍ "ເປີດໂປງ" ເຮົາຕໍ່ໜ້າສາທາລະນະຊົນ. ເຮົາມີຄວາມກຽດຊັງທີ່ສຸດຕໍ່ພຶດຕິກຳທີ່ຕໍ່າຊ້າຂອງມະນຸດ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າຢ່າງຈະແຈ້ງວ່າ ມະນຸດບໍ່ມີສາມັນສຳນຶກ. ແຕ່ຜູ້ຄົນຫົວແຂງ; ພວກເຂົາຈັບເອົາ "ດາບ ແລະ ຫອກ" ຂອງພວກເຂົາ ແລະ ຕໍ່ສູ້ກັບເຮົາ ໂດຍເວົ້າວ່າ ພຣະທຳຂອງເຮົາຂັດກັບຄວາມເປັນຈິງ, ເວົ້າວ່າເຮົາປະນາມພວກເຂົາ ແຕ່ເຮົາກໍບໍ່

ໄດ້ນຳຜົນກຳມາສູ່ພວກເຂົາຍ້ອນພຶດຕິກຳທີ່ຮຸນແຮງເຫຼົ່ານີ້ຂອງພວກເຂົາ. ເຮົາພຽງແຕ່ໃຊ້ຄວາມຈິງຂອງເຮົາ ເພື່ອເອົາຊະນະຜູ້ຄົນ ແລະ ເພື່ອເຮັດໃຫ້ພວກເຂົາຮູ້ສຶກອັບອາຍກ່ຽວກັບຕົວເອງ ເຊິ່ງຫຼັງຈາກນັ້ນ ພວກເຂົາກໍຖອຍກັບຢ່າງງຽບໆ. ເຮົາບໍ່ຕໍ່ສູ້ກັບມະນຸດ ເນື່ອງຈາກວ່າ ບໍ່ມີປະໂຫຍດຫຍັງທີ່ຈະເຮັດແບບນັ້ນ. ເຮົາຈະປະຕິບັດຕາມໜ້າທີ່ຂອງເຮົາ ແລະ ເຮົາຫວັງວ່າ ມະນຸດຍັງຈະສາມາດປະຕິບັດຕາມໜ້າທີ່ຂອງເຂົາ ແລະ ຈະບໍ່ຕໍ່ຕ້ານເຮົາ. ມັນຈະບໍ່ດີກວ່າບໍ ທີ່ຈະເປັນມິດກັນຢ່າງສັນຕິແບບນີ້? ເປັນຫຍັງຕ້ອງເຮັດໃຫ້ຄວາມສຳພັນຂອງພວກເຮົາເຈັບປວດ? ພວກເຮົາເປັນມິດກັນໃນຫຼາຍປີທີ່ຜ່ານມາ ແລ້ວມີຄວາມຈຳເປັນຫຍັງທີ່ຈະຕ້ອງສ້າງຄວາມວຸ້ນວາຍໃຫ້ກັບພວກເຮົາທັງສອງຝ່າຍ? ສິ່ງນັ້ນຈະບໍ່ມີປະໂຫຍດຫຍັງຕໍ່ຊື່ສຽງຂອງພວກເຮົາຢ່າງສິ້ນເຊີງ ບໍ່ແມ່ນບໍ? ມິດຕະພາບຂອງພວກເຮົາແມ່ນ "ມິດຕະພາບທີ່ເກົ່າແກ່" ແລະ ເປັນ "ເພື່ອນມິດທີ່ເກົ່າແກ່" ນັບຫຼາຍປີ ແລ້ວມີຄວາມຈຳເປັນຫຍັງ ທີ່ຈະຕ້ອງຈາກກັນດ້ວຍຄວາມເຈັບແສບ? ມີຫຍັງທີ່ເປັນປະໂຫຍດຕໍ່ສິ່ງນີ້ບໍ? ເຮົາຫວັງວ່າ ຜູ້ຄົນຈະເອົາໃຈໃສ່ຕໍ່ຜົນກະທົບ ແລະ ຫວັງວ່າ ພວກເຂົາຈະຮູ້ວ່າສິ່ງໃດດີຕໍ່ພວກເຂົາ. ທັດສະນະຄະຕິຂອງເຮົາທີ່ມີຕໍ່ມະນຸດໃນປັດຈຸບັນແມ່ນພຽງພໍສຳລັບການປຶກສາຫາລືກັນຕະຫຼອດຊີວິດຂອງເຂົາ, ແລ້ວເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດຮູ້ເຖິງຄວາມເມດຕາຂອງເຮົາສະເໝີ? ເປັນຍ້ອນວ່າ ພວກເຂົາຂາດກຳລັງໃນການສະແດງອອກບໍ? ພວກເຂົາຂາດຄຳສັບທີ່ພຽງພໍບໍ? ເປັນຫຍັງພວກເຂົາຈຶ່ງເວົ້າບໍ່ອອກຕະຫຼອດ? ມີໃຜແດ່ທີ່ບໍ່ຮູ້ຈັກວິທີທີ່ເຮົາປະພຶດຕົນເອງ? ຜູ້ຄົນແມ່ນຮັບຮູ້ເຖິງການກະທຳຂອງເຮົາຢ່າງສົມບູນ, ມັນເປັນພຽງແຕ່ວ່າ ພວກເຂົາມັກເອົາປຽບຄົນອື່ນຕະຫຼອດເວລາ, ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ຍອມປ່ອຍວາງຜົນປະໂຫຍດຂອງຕົວເອງ. ຖ້າພຣະທຳໜຶ່ງວະລີໄດ້ແຕະຕ້ອງຜົນປະໂຫຍດຂອງພວກເຂົາ ພວກເຂົາກໍຈະບໍ່ຍອມຈົນກວ່າພວກເຂົາຈະໄດ້ປຽບ, ແລ້ວສິ່ງນັ້ນມີປະໂຫຍດຫຍັງ? ຜູ້ຄົນບໍ່ສາມາດແຂ່ງຂັນກັນເພື່ອເອົາສິ່ງທີ່ພວກເຂົາສາມາດປະກອບສ່ວນ, ແຕ່ຕໍ່ສູ້ກັນເພື່ອເອົາສິ່ງທີ່ພວກເຂົາສາມາດຮັບເອົາໄດ້. ເຖິງແມ່ນວ່າ ຈະບໍ່ມີຄວາມສຸກໃນສະຖານະຂອງພວກເຂົາ ແຕ່ພວກເຂົາກໍຖະໜຸຖະໜອມມັນຫຼາຍ, ເຖິງກັບຖືມັນເປັນຊັບສົມບັດອັນລ້ຳຄ່າ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຍອມທົນທຸກກັບການຂ້ຽນຕີຂອງເຮົາແທນທີ່ຈະຍອມສະຫຼະຜົນປະໂຫຍດຈາກສະຖານະ. ຜູ້ຄົນຄິດວ່າ ຕົວເອງສູງສົ່ງ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ຍອມປ່ອຍວາງຕົວເອງ. ບາງເທື່ອ ມີຄວາມບໍ່ຖືກຕ້ອງບາງຢ່າງເລັກໆນ້ອຍໆໃນການປະເມີນມະນຸດຂອງເຮົາ ຫຼື ບາງເທື່ອ ເຮົາໄດ້ຕິດປ້າຍສະຫຼາກບໍ່ໄດ້ຮຸນແຮງ ຫຼື ຜ່ອນຜັນໃສ່ເຂົາ ແຕ່ ໂດຍລວມແລ້ວ ຄວາມຫວັງຂອງເຮົາກໍຄື ຜູ້ຄົນຈະຮັບເອົາສິ່ງນີ້ເປັນການຕັກເຕືອນ.

ວັນທີ 21 ພຶດສະພາ 1992

# ບົດທີ 45

ຄັ້ງໜຶ່ງ ເຮົາເຄີຍເລືອກສິ່ງຂອງທີ່ດີເພື່ອເກັບໄວ້ໃນເຮືອນຂອງເຮົາ ເພື່ອວ່າ ພາຍໃນສິ່ງນີ້ຈະມີຄວາມອຸດົມສົມບູນທີ່ບໍ່ມີສິ່ງໃດທຽບເທົ່າໄດ້ ແລະ ດ້ວຍເຫດນັ້ນ ມັນກໍຈະຖືກຕົກແຕ່ງຂຶ້ນ ແລະ ເຮົາກໍຈະໄດ້ຮັບຄວາມສຸກຈາກສິ່ງນີ້ໄປນຳ. ແຕ່ຍ້ອນທັດສະນະຄະຕິຂອງມະນຸດທີ່ມີຕໍ່ເຮົາ ແລະ ຍ້ອນແຮງຈູງໃຈຂອງຜູ້ຄົນ ເຮົາຈຶ່ງບໍ່ມີທາງເລືອກ ນອກຈາກວາງພາລະກິດນີ້ໄວ້ທາງຂ້າງ ແລະ ເຮັດພາລະກິດອື່ນ. ເຮົາຈະໃຊ້ແຮງຈູງໃຈຂອງມະນຸດເພື່ອບັນລຸພາລະກິດຂອງເຮົາ, ເຮົາຈະເຮັດໃຫ້ທຸກສິ່ງມາຮັບໃຊ້ເຮົາ ແລະ ດ້ວຍເຫດນັ້ນ ກໍຈະເຮັດໃຫ້ເຮືອນຂອງເຮົາບໍ່ມົວໝອງ ແລະ ເປົ່າປ່ຽວອີກຕໍ່ໄປ. ເຮົາຄັ້ງໜຶ່ງເຄີຍເບິ່ງທ່າມກາງມະນຸດ: ທຸກສິ່ງທີ່ເປັນເນື້ອໜັງ ແລະ ເລືອດແມ່ນຢູ່ໃນຄວາມມືດມົວ ແລະ ບໍ່ມີສິ່ງໃດໄດ້ຮັບພອນຂອງການມີຢູ່ຂອງເຮົາ. ຜູ້ຄົນດຳລົງຊີວິດໃນທ່າມກາງການອວຍພອນ ແຕ່ພວກເຂົາບໍ່ຮູ້ວ່າ ຕົວເອງໄດ້ຮັບພອນເຫຼົ່ານັ້ນ. ຖ້າພອນຂອງເຮົາທີ່ມີຕໍ່ມະນຸດຊາດບໍ່ໄດ້ສືບເນື່ອງຈົນຮອດປັດຈຸບັນແລ້ວແມ່ນໃຜໃນທ່າມກາງມະນຸດຊາດທີ່ຈະມີຊີວິດຢູ່ຈົນຮອດປັດຈຸບັນ ແລະ ບໍ່ໄດ້ດັບສະຫຼາຍໄປ? ການທີ່ມະນຸດດຳລົງຊີວິດແມ່ນພອນຂອງເຮົາ ແລະ ນັ້ນໝາຍຄວາມວ່າ ເຂົາດຳລົງຊີວິດໃນທ່າມກາງການອວຍພອນຂອງເຮົາ ເພາະເຂົາບໍ່ມີຫຍັງແຕ່ຕົ້ນ ແລະ ເພາະເຂົາບໍ່ມີຕົ້ນທຶນທີ່ຈະດຳລົງຊີວິດເທິງແຜ່ນດິນໂລກ ແລະ ພາຍໃຕ້ສະຫວັນມາແຕ່ຕົ້ນ; ໃນປັດຈຸບັນ ເຮົາສືບຕໍ່ຊ່ວຍມະນຸດ ແລະ ຍ້ອນສິ່ງນີ້ເທົ່ານັ້ນ ມະນຸດຈຶ່ງຢືນຢູ່ຕໍ່ໜ້າເຮົາ ແລະ ໂຊກດີທີ່ໄດ້ຫຼີກໜີຄວາມຕາຍ. ຜູ້ຄົນສະຫຼຸບຄວາມລັບຂອງການມີຢູ່ຂອງມະນຸດ ແຕ່ບໍ່ມີໃຜເຄີຍເຫັນວ່າ ນີ້ແມ່ນພອນຂອງເຮົາ. ດ້ວຍເຫດນັ້ນ ທຸກຄົນຈຶ່ງໄດ້ສາບແຊ່ງຄວາມບໍ່ຍຸຕິທຳພາຍໃນໂລກ ແລະ ພວກເຂົາທຸກຄົນຈົ່ມກ່ຽວກັບເຮົາ ຍ້ອນຄວາມທຸກໃນຊີວິດຂອງພວກເຂົາ. ຖ້າບໍ່ແມ່ນຍ້ອນພອນຂອງເຮົາ ແລ້ວແມ່ນໃຜຈະໄດ້ເຫັນປັດຈຸບັນ? ທຸກຄົນຕຳນິເຮົາ ຍ້ອນພວກເຂົາບໍ່ສາມາດດຳລົງຊີວິດໃນທ່າມກາງຄວາມສະບາຍ. ຖ້າຊີວິດຂອງມະນຸດແຈ່ມໃສ ແລະ ສົດໃສ, ຖ້າ "ລົມແຫ່ງລະດູໃບໄມ້ປົ່ງ" ທີ່ອົບອຸ່ນຖືກສົ່ງເຂົ້າສູ່ຫົວໃຈຂອງມະນຸດ, ເຮັດໃຫ້ເຂົາມີຄວາມສົດໃສໃນຮ່າງກາຍຂອງເຂົາ ແລະ ເຮັດໃຫ້ເຂົາບໍ່ມີຄວາມເຈັບປວດແມ່ນແຕ່ໜ້ອຍດຽວ ແລ້ວແມ່ນໃຜໃນທ່າມກາງມະນຸດທີ່ຈະຕາຍດ້ວຍຄວາມຈົ່ມວ່າ? ເຮົາມີຄວາມລຳບາກຫຼາຍທີ່ຈະໄດ້ຮັບຄວາມຈິງໃຈຢ່າງເດັດຂາດຈາກມະນຸດ ເນື່ອງຈາກຜູ້ຄົນມີແຜນການລໍ້ລວງຫຼາຍ ເຊິ່ງເວົ້າງ່າຍໆກໍຄື ພຽງພໍທີ່ຈະເຮັດໃຫ້ຫົວຂອງຄົນປົ່ນໄດ້. ແຕ່ເມື່ອເຮົາຍົກຂໍ້ຄັດຄ້ານຕໍ່ພວກເຂົາ, ພວກເຂົາກໍເຮັດເມີນເສີຍຕໍ່ເຮົາ ແລະ ພວກເຂົາກໍບໍ່ສົນໃຈເຮົາ ເນື່ອງຈາກວ່າ ການຄັດຄ້ານຂອງເຮົາໄດ້ແທງຈິດໃຈຂອງພວກເຂົາ ເຊິ່ງເຮັດໃຫ້ພວກເຂົາບໍ່ສາມາດຖືກສັ່ງສອນໄດ້ຈາກຫົວຮອດຕີນ ແລະດ້ວຍເຫດນັ້ນ ຜູ້ຄົນຈຶ່ງກຽດຊັງການມີຢູ່ຂອງເຮົາ ເນື່ອງຈາກເຮົາຮັກທີ່ຈະ "ທໍລະມານ" ພວກເຂົາຕະຫຼອດ. ຍ້ອນພຣະທຳຂອງເຮົາ ຜູ້ຄົນຈຶ່ງຮ້ອງເພງ ແລະ ເຕັ້ນລຳ, ຍ້ອນພຣະທຳຂອງເຮົາ ພວກເຂົາຈຶ່ງກົ້ມຫົວຂອງພວກເຂົາລົງຢ່າງງຽບໆ ແລະ ຍ້ອນພຣະທຳຂອງເຮົາ ພວກເຂົາຈຶ່ງຮ້ອງໄຫ້ສຽງດັງ. ໃນພຣະທຳຂອງເຮົາ ຜູ້ຄົນແມ່ນໂສກເສົ້າ, ໃນພຣະທຳຂອງເຮົາ ພວກເຂົາໄດ້ຮັບແສງສະຫວ່າງເພື່ອການຢູ່

ລອດ. ຍ້ອນພຣະທຳຂອງເຮົາ ພວກເຂົານອນບໍ່ຫຼັບ ພິກໄປພິກມາທັງກາງເວັນ ແລະ ກາງຄືນ ແລະ ຍ້ອນພຣະທຳຂອງເຮົາ ພວກເຂົາສົນລະວົນໄປມາຢູ່ທົ່ວທຸກບ່ອນ. ພຣະທຳຂອງເຮົາໂຍນຜູ້ຄົນລົງສູ່ແດນມໍລະນາ ແລ້ວຫຼັງຈາກນັ້ນກໍໂຍນພວກເຂົາເຂົ້າໄປສູ່ການຂ້ຽນຕີ ແຕ່ຜູ້ຄົນກໍຍັງມີຄວາມສຸກກັບພອນຂອງເຮົາໂດຍທີ່ບໍ່ຮູ້ສຶກຕົວ. ມະນຸດສາມາດບັນລຸສິ່ງນີ້ໄດ້ບໍ? ມັນສາມາດແລກປ່ຽນກັບຄວາມພະຍາຍາມຢ່າງບໍ່ອິດເມື່ອຍຂອງຜູ້ຄົນໄດ້ບໍ? ແມ່ນໃຜສາມາດຫຼົບໜີຈາກການປັ້ນແຕ່ງຂອງພຣະທຳຂອງເຮົາ? ສະນັ້ນ, ຍ້ອນຄວາມລົ້ມເຫຼວຂອງມະນຸດ ເຮົາຈຶ່ງປະທານພຣະທຳຂອງເຮົາໃຫ້ແກ່ມະນຸດຊາດ, ເຮັດໃຫ້ຂໍ້ບົກຜ່ອງຂອງມະນຸດຖືກຫຼໍ່ລ້ຽງດ້ວຍພຣະທຳຂອງເຮົາ ແລະ ນຳເອົາຄວາມອຸດົມສົມບູນທີ່ຫາສິ່ງໃດປຽບທຽບໄດ້ມາສູ່ຊີວິດຂອງມະນຸດຊາດ.

ເຮົາພິຈາລະນາຄຳເວົ້າ ແລະ ການກະທຳຂອງຜູ້ຄົນຢ່າງຖີ່ຖ້ວນເປັນປະຈຳ. ໃນພຶດຕິກຳ ແລະ ການສະແດງອອກທາງໃບໜ້າຂອງພວກເຂົາ ເຮົາໄດ້ຄົ້ນພົບ “ຄວາມລຶກລັບ” ຫຼາຍປະການ. ໃນການພົວພັນລະຫວ່າງຜູ້ຄົນ, ແທ້ຈິງແລ້ວ “ສູດລັບ” ແມ່ນຈຸດເດັ່ນທີ່ສຸດ ແລະ ດ້ວຍເຫດນັ້ນ ເມື່ອເຮົາພົວພັນກັບມະນຸດ ສິ່ງທີ່ເຮົາໄດ້ຮັບແມ່ນ “ສູດລັບຂອງການພົວພັນຂອງມະນຸດ” ເຊິ່ງສະແດງໃຫ້ເຫັນວ່າ ມະນຸດບໍ່ໄດ້ຮັກເຮົາ. ເຮົາຕຳໜິມະນຸດຍ້ອນຄວາມລົ້ມເຫຼວຂອງເຂົາສະເໝີ ແຕ່ເຮົາກໍບໍ່ສາມາດໄດ້ຮັບຄວາມເຊື່ອໃຈຈາກເຂົາ. ມະນຸດບໍ່ເຕັມໃຈທີ່ຈະຍອມໃຫ້ເຮົາຂ້າເຂົາ ເນື່ອງຈາກໃນ “ສູດລັບຂອງການພົວພັນຂອງມະນຸດ” ແມ່ນບໍ່ເຄີຍມີການຄົ້ນພົບວ່າ ມະນຸດໄດ້ທົນທຸກກັບໄພພິບັດທີ່ເຮັດໃຫ້ເຖິງຕາຍ. ເຂົາພຽງແຕ່ທົນທຸກກັບຄວາມລົ້ມເຫຼວໜ້ອຍໜຶ່ງໃນໄລຍະເວລາແຫ່ງຄວາມໂຊກຮ້າຍ. ຜູ້ຄົນຮ້ອງໄຫ້ອອກມາຍ້ອນພຣະທຳຂອງເຮົາ ແລະ ຄຳອ້ອນວອນຂອງພວກເຂົາແມ່ນການຈົ່ມວ່າກ່ຽວກັບຄວາມບໍ່ມີເມດຕາຂອງເຮົາ. ມັນເປັນຄືກັບວ່າ ພວກເຂົາກຳລັງຊອກຫາ “ຄວາມຮັກ” ທີ່ແທ້ຈິງຂອງເຮົາທີ່ມີຕໍ່ມະນຸດ ແຕ່ພວກເຂົາຈະສາມາດຊອກຫາຄວາມຮັກຂອງເຮົາໃນພຣະທຳທີ່ເຂັ້ມງວດຂອງເຮົາໄດ້ແນວໃດ? ດ້ວຍເຫດນັ້ນ ພວກເຂົາຈຶ່ງສູນເສຍຄວາມຫວັງຕະຫຼອດຍ້ອນພຣະທຳຂອງເຮົາ. ທັນທີທີ່ພວກເຂົາໄດ້ອ່ານພຣະທຳຂອງເຮົາ, ມັນກໍຄືກັບວ່າ ພວກເຂົາໄດ້ເຫັນ “ມັດຈຸລາດ” ແລະ ດ້ວຍເຫດນັ້ນ ຈຶ່ງສັ່ນດ້ວຍຄວາມຢ້ານກົວ. ນີ້ເຮັດໃຫ້ເຮົາບໍ່ດີໃຈເລີຍ. ເປັນຫຍັງຜູ້ຄົນທີ່ມີເນື້ອໜັງ ຜູ້ທີ່ດຳລົງຊີວິດໃນທ່າມກາງຄວາມຕາຍຈຶ່ງຢ້ານຄວາມຕາຍຕະຫຼອດ? ມະນຸດ ແລະ ຄວາມຕາຍແມ່ນສັດຕູທີ່ຂົມຂື່ນບໍ? ເປັນຫຍັງຄວາມຢ້ານຕໍ່ຄວາມຕາຍຈຶ່ງເຮັດໃຫ້ຜູ້ຄົນມີຄວາມທຸກໃຈ? ຕະຫຼອດປະສົບການທີ່ “ພິເສດ” ຂອງຊີວິດຂອງພວກເຂົາ, ພວກເຂົາປະສົບກັບຄວາມຕາຍໜ້ອຍໜຶ່ງເທົ່ານັ້ນບໍ? ໃນສິ່ງທີ່ພວກເຂົາເວົ້າ ເປັນຫຍັງຜູ້ຄົນຈຶ່ງຈົ່ມກ່ຽວກັບເຮົາຕະຫຼອດ? ສະນັ້ນ, ເຮົາຈຶ່ງສະຫຼຸບຄະຕິພົດບົດທີສີ່ສຳລັບຊີວິດມະນຸດດັ່ງນີ້: ຜູ້ຄົນມີຄວາມເຊື່ອຟັງພຽງແຕ່ໜ້ອຍດຽວຕໍ່ເຮົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງກຽດຊັງເຮົາຕະຫຼອດ. ຍ້ອນມະນຸດຊັງເຮົາ, ເຮົາຈຶ່ງຈາກໄປ. ເຫດໃດເຮົາຕ້ອງຍອມຢູ່ພາຍໃຕ້ສິ່ງນີ້? ເປັນຫຍັງເຮົາຕ້ອງສ້າງຄວາມກຽດຊັງໃນຜູ້ຄົນຕະຫຼອດ? ໃນເມື່ອຜູ້ຄົນບໍ່ຕ້ອນຮັບການມີຢູ່ຂອງເຮົາ ແລ້ວເປັນຫຍັງເຮົາຕ້ອງດຳລົງຊີວິດຢູ່ໃນເຮືອນຂອງມະນຸດຢ່າງໄຮ້ຢາງອາຍ? ເຮົາບໍ່ມີທາງເລືອກ ນອກຈາກເອົາ “ກະເປົາ” ຂອງເຮົາ ແລະ ໄປຈາກມະນຸດ. ແຕ່ຜູ້ຄົນບໍ່ຍອມໃຫ້ເຮົາຈາກໄປ

ແລະ ພວກເຂົາບໍ່ເຄີຍຕ້ອງການໃຫ້ເຮົາຈາກໄປ. ພວກເຂົາຮ້ອງໄຫ້ ແລະ ສະອຶກສະອື້ນ ໂດຍທີ່ມີຄວາມຢ້ານຢູ່ເລື້ອຍໆວ່າ ເຮົາຈະຈາກໄປ ແລະ ດ້ວຍເຫດນັ້ນ ພວກເຂົາຈະສູນເສຍສິ່ງທີ່ພວກເຂົາເພິ່ງພາໃນການມີຊີວິດ. ເມື່ອເຫັນການຈ້ອງເບິ່ງດ້ວຍຄວາມອ້ອນວອນຂອງພວກເຂົາ ໃຈຂອງເຮົາກໍອ່ອນລົງ. ໃນທ່າມກາງມະຫາສະໝຸດທັງໝົດຂອງໂລກ ແມ່ນໃຜສາມາດຮັກເຮົາ? ມະນຸດແມ່ນຖືກປົກຄຸມໄປດ້ວຍນໍ້າສີກະປິກ ຖືກກືນກິນດ້ວຍພະລັງຂອງທະເລ. ເຮົາກຽດຊັງຄວາມບໍ່ເຊື່ອຟັງຂອງມະນຸດ ແຕ່ເຮົາກໍຍັງຮູ້ສຶກເຫັນອົກເຫັນໃຈຕໍ່ຄວາມໂຊກຮ້າຍຂອງມະນຸດທຸກຄົນ ເນື່ອງຈາກວ່າ ບໍ່ວ່າຈະຢ່າງໃດກໍຕາມ ມະນຸດກໍຍັງແມ່ນຜູ້ເຄາະຮ້າຍ. ເຮົາຈະສາມາດຖິ້ມມະນຸດລົງໄປສູ່ນໍ້າໄດ້ແນວໃດ ເມື່ອເຂົາອ່ອນແອ ແລະ ຂາດກຳລັງ? ເຮົາໂຫດຮ້າຍຫຼາຍແທ້ບໍທີ່ຈະເຕະເຂົາເວລາທີ່ເຂົາລົ້ມລົງ? ໃຈຂອງເຮົາແມ່ນອຳມະຫິດຫຼາຍບໍ? ມັນເປັນຍ້ອນ ທັດສະນະຄະຕິຂອງເຮົາທີ່ມີຕໍ່ມະນຸດຊາດ ມະນຸດຈຶ່ງໄດ້ເຂົ້າສູ່ຍຸກນີ້ພ້ອມກັບເຮົາ, ແລະ ມັນເປັນຍ້ອນສິ່ງນີ້ ເຂົາຈຶ່ງໄດ້ຜ່ານກາງເວັນ ແລະ ກາງຄືນທີ່ພິເສດເຫຼົ່ານີ້ພ້ອມກັບເຮົາ. ໃນປັດຈຸບັນ ຜູ້ຄົນແມ່ນຢູ່ໃນຄວາມເຈັບປວດແຫ່ງຄວາມສຸກ, ພວກເຂົາມີຄວາມຮູ້ສຶກຫຼາຍເຖິງຄວາມຮັກຂອງເຮົາ ແລະ ພວກເຂົາຮັກເຮົາດ້ວຍຄວາມແຂງແກ່ນຫຼາຍ, ຍ້ອນມີພະລັງໃນຊີວິດຂອງພວກເຂົາ ແລະ ພວກເຂົາໄດ້ຢຸດເປັນບຸດຊາຍທີ່ຟຸ່ມເຟືອຍ ແລະ ລ້ອນເລ້ພະເນຈອນໄປທົ່ວແຜ່ນດິນໂລກ.

ໃນມື້ທີ່ເຮົາອາໄສຢູ່ກັບມະນຸດ ຜູ້ຄົນແມ່ນອາໄສເຮົາ ແລະ ຍ້ອນເຮົາເຫັນອົກເຫັນໃຈມະນຸດໃນທຸກສິ່ງ ແລະ ເຮົາພິຖີພິຖັນກັບການເບິ່ງແຍງເຂົາ ຜູ້ຄົນຈຶ່ງອາໄສຢູ່ໃນອ້ອມກອດທີ່ອົບອຸ່ນຂອງເຮົາຕະຫຼອດ, ບໍ່ໄດ້ທົນຕໍ່ລົມພັດເຢັນໃດໆ, ບໍ່ວ່າຝົນຈະຕົກ ຫຼື ແດດຈະເຜົາໄໝ້ ຜູ້ຄົນດຳລົງຊີວິດໃນທ່າມກາງຄວາມສຸກ ແລະ ປະຕິບັດກັບເຮົາດັ່ງເປັນແມ່ທີ່ຮັກ. ຜູ້ຄົນແມ່ນຄືດອກໄມ້ໃນເຮືອນແກ້ວ ທີ່ບໍ່ສາມາດທົນຕໍ່ການໂຈມຕີຂອງ "ໄພທຳມະຊາດ" ໄດ້ເລີຍ ແລະ ບໍ່ເຄີຍສາມາດຢືນຢ່າງໝັ້ນຄົງໄດ້. ສະນັ້ນ ເຮົາຈຶ່ງວາງພວກເຂົາໄວ້ໃນທ່າມກາງການທົດລອງຂອງທະເລຄື້ນຍັກ ແລະ ພວກເຂົາບໍ່ສາມາດເຮັດຫຍັງໄດ້ ນອກຈາກຖືກ "ຄື້ນພັດໄປມາ" ຢ່າງບໍ່ຢຸດຢັ້ງ. ພວກເຂົາແມ່ນບໍ່ມີອຳນາດທີ່ຈະຂັດຂືນເລີຍ ແລະ ຍ້ອນວຸດທິພາວະຂອງພວກເຂົາຂາດແຄນຫຼາຍ ແລະ ຮ່າງກາຍຂອງພວກເຂົາອ່ອນແອຫຼາຍເຮົາຈຶ່ງຮູ້ສຶກເຖິງຄວາມຍາກລຳບາກຂອງພວກເຂົາ. ສະນັ້ນ, ຜູ້ຄົນຈຶ່ງຍອມຢູ່ພາຍໃຕ້ການທົດລອງຂອງເຮົາໂດຍທີ່ບໍ່ຮູ້ສຶກຕົວ ຍ້ອນພວກເຂົາບອບບາງຫຼາຍ ແລະ ບໍ່ສາມາດທົນຕໍ່ລົມພັດທີ່ແຮງ ແລະແສງແດດທີ່ເຜົາໄໝ້. ນີ້ບໍ່ແມ່ນພາລະກິດຂອງເຮົາໃນປັດຈຸບັນບໍ? ເມື່ອພະເຊີນກັບການທົດລອງຂອງເຮົາ ເປັນຫຍັງຜູ້ຄົນຈຶ່ງຮ້ອງໄຫ້ອອກມາຕະຫຼອດ? ເຮົາເຮັດໃນສິ່ງທີ່ບໍ່ຍຸຕິທຳຕໍ່ພວກເຂົາບໍ? ເຮົາຈິງໃຈຂ້າພວກເຂົາບໍ? ເປັນຫຍັງສະພາບຂອງມະນຸດທີ່ໜ້າຮັກຕ້ອງຕາຍ ໂດຍບໍ່ມີວັນໄດ້ຟື້ນຄືນຊີບອີກ? ຜູ້ຄົນຈັບເຮົາໄວ້ຕະຫຼອດ ແລະ ບໍ່ປ່ອຍໄປ; ຍ້ອນພວກເຂົາບໍ່ເຄີຍສາມາດດຳລົງຊີວິດດ້ວຍຕົວເອງ ພວກເຂົາຈຶ່ງປ່ອຍໃຫ້ຕົວເອງຖືກນຳພາດ້ວຍກຳມືຂອງເຮົາຕະຫຼອດເວລາໂດຍມີຄວາມຢ້ານກົວຢູ່ເລື້ອຍໆວ່າ ຈະຖືກຄົນອື່ນເອົາໄປ. ຊີວິດທັງໝົດຂອງພວກເຂົາບໍ່ຖືກເຮົານຳພາບໍ? ໃນຊີວິດທີ່ວຸ້ນວາຍຂອງພວກເຂົາ, ໃນຂະນະທີ່ພວກເຂົາຂ້າມຍອດພູ ແລະ ຮ່ອມພູ ພວກເຂົາໄດ້ມີປະສົບການທີ່ສັບສົນ

ແລ້ວສິ່ງນີ້ບໍ່ໄດ້ມາຈາກມືຂອງເຮົາບໍ? ເປັນຫຍັງຜູ້ຄົນບໍ່ສາມາດເຂົ້າໃຈຫົວໃຈຂອງເຮົາ? ເປັນຫຍັງພວກເຂົາຈຶ່ງເຂົ້າໃຈເຈດຕະນາທີ່ດີຂອງເຮົາຜິດຕະຫຼອດ? ເປັນຫຍັງພາລະກິດຂອງເຮົາບໍ່ຖືກເລີ່ມດຳເນີນຢ່າງລາບລື່ນເທິງແຜ່ນດິນໂລກ? ຍ້ອນຄວາມອ່ອນແອຂອງມະນຸດ ເຮົາຈຶ່ງຫຼີບຫຼີກມະນຸດ ທີ່ເຮັດໃຫ້ເຮົາມີຄວາມໂສກເສົ້າສະເໝີ: ເປັນຫຍັງຂັ້ນຕອນຕໍ່ໄປໃນການເຮັດພາລະກິດຂອງເຮົາບໍ່ສາມາດດຳເນີນໃນມະນຸດ? ສະນັ້ນ, ເຮົາຈຶ່ງມິດງຽບ ໂດຍພິຈາລະນາເຂົາຢ່າງລະອຽດ: ເປັນຫຍັງເຮົາຈຶ່ງຖືກຈຳກັດໂດຍຄວາມບົກຜ່ອງຂອງມະນຸດ? ເປັນຫຍັງຈຶ່ງມີສິ່ງກີດຂວາງພາລະກິດຂອງເຮົາຕະຫຼອດເວລາ? ໃນປັດຈຸບັນ ເຮົາຍັງບໍ່ໄດ້ພົບເຫັນຄຳຕອບຢ່າງສົມບູນໃນມະນຸດ ເນື່ອງຈາກມະນຸດເປັນຮ້ອນໆໜາວໆຢູ່ຕະຫຼອດ, ເຂົາບໍ່ເຄີຍປົກກະຕິ, ຖ້າເຂົາຊັງເຮົາກໍຊັງຈົນຮອດກະດູກດຳຂອງເຂົາ ຫຼື ຖ້າຮັກກໍຮັກເຮົາຈົນເຖິງທີ່ສຸດ. ເຮົາກໍຄືພຣະເຈົ້າທຳມະດາທີ່ ບໍ່ສາມາດທົນຕໍ່ການທໍລະມານດັ່ງກ່າວຈາກມະນຸດໄດ້. ຍ້ອນຜູ້ຄົນຜິດປົກກະຕິທາງດ້ານຈິດໃຈຕະຫຼອດເວລາ ຈຶ່ງເບິ່ງຄືວ່າ ເຮົາຢ້ານມະນຸດໜ້ອຍໜຶ່ງ ແລະ ດ້ວຍເຫດນັ້ນ ເມື່ອເບິ່ງທຸກການເຄື່ອນໄຫວຂອງເຂົາ ມັນເຮັດໃຫ້ເຮົາຄິດເຖິງຄວາມຜິດປົກກະຕິຂອງເຂົາ. ເຮົາໄດ້ຄົ້ນພົບຄວາມລຶກລັບຂອງມະນຸດໂດຍບໍ່ໄດ້ເຈດຕະນາ: ປະກົດວ່າ ມີຜູ້ບົງການຢູ່ເບື້ອງຫຼັງຂອງເຂົາ; ດ້ວຍເຫດນັ້ນ, ຜູ້ຄົນຈຶ່ງກ້າ ແລະ ໝັ້ນໃຈຕະຫຼອດ ຄືກັບວ່າ ພວກເຂົາໄດ້ເຮັດບາງສິ່ງທີ່ທ່ຽງທຳ. ສະນັ້ນ, ຜູ້ຄົນຈຶ່ງທຳທ່າເປັນຜູ້ໃຫຍ່ ແລະ ເວົ້າຫວານກັບ "ເດັກນ້ອຍ" ສະເໝີ. ເມື່ອເບິ່ງການຫຼອກລວງຂອງມະນຸດ ເຮົາກໍບໍ່ສາມາດເຮັດຫຍັງໄດ້ ນອກຈາກໃຈຮ້າຍ: ເປັນຫຍັງຜູ້ຄົນຈຶ່ງບໍ່ຮັກ ແລະ ບໍ່ເຄົາລົບຕົນເອງ? ເປັນຫຍັງພວກເຂົາຈຶ່ງບໍ່ຮູ້ຈັກຕົວເອງ? ພຣະທຳຂອງເຮົາໄດ້ຕາຍໄປແລ້ວບໍ? ພຣະທຳຂອງເຮົາແມ່ນສັດຕູຂອງມະນຸດບໍ? ເປັນຫຍັງຜູ້ຄົນບໍ່ພໍໃຈເຮົາເມື່ອພວກເຂົາໄດ້ອ່ານພຣະທຳຂອງເຮົາ? ເປັນຫຍັງຜູ້ຄົນຈຶ່ງເພີ່ມຄວາມຄິດຂອງຕົວເອງໃສ່ພຣະທຳຂອງເຮົາຕະຫຼອດ? ເຮົາບໍ່ມີເຫດຜົນຕໍ່ມະນຸດບໍ? ທຸກຄົນຄວນຄິດໜັກກ່ຽວກັບສິ່ງນີ້ ກ່ຽວກັບສິ່ງທີ່ມີຢູ່ພາຍໃນພຣະທຳຂອງເຮົາ.

ວັນທີ 24 ພຶດສະພາ 1992

# ບົດທີ 46

ເຮົາບໍ່ຮູ້ວ່າຜູ້ຄົນປະຕິບັດຕໍ່ສິ່ງໃດໃນການເຮັດໃຫ້ພຣະທຳຂອງເຮົາເປັນພື້ນຖານຂອງການເປັນຢູ່ຂອງພວກເຂົາ. ເຮົາຮູ້ສຶກເປັນຫ່ວງເປັນໃຍຕໍ່ໂຊກຊະຕາຂອງມະນຸດຢູ່ສະເໝີ, ແຕ່ຜູ້ຄົນແມ່ນຄືກັບບໍ່ຮູ້ສຶກເຖິງສິ່ງນີ້ ແລະ ຜົນຕາມມາກໍຄື ພວກເຂົາບໍ່ເຄີຍໃສ່ໃຈຕໍ່ການປະຕິບັດຂອງເຮົາຈັກເທື່ອ ແລະ ບໍ່ເຄີຍເກີດມີການເຄົາລົບບູຊາເຮົາ ຍ້ອນທ່າທີຂອງເຮົາທີ່ມີຕໍ່ມະນຸດ. ມັນເປັນຄືກັບວ່າ ພວກເຂົາປະຖິ້ມຄວາມຮູ້ສຶກເພື່ອເຮັດໃຫ້ເຮົາພໍໃຈແຕ່ດົນແລ້ວ. ເມື່ອພົບກັບສະຖານະການດັ່ງກ່າວ ເຮົາກໍມິດງຽບລົງອີກຄັ້ງ. ເປັນຫຍັງພຣະທຳຂອງເຮົາຈຶ່ງບໍ່ສົມຄວນໃຫ້ມະນຸດຄຳນຶງເຖິງ ແລະ ບໍ່ສົມຄວນແກ່ທາງເຂົ້າຫຼາຍຂຶ້ນ? ມັນເປັນຍ້ອນ ເຮົາບໍ່ມີຄວາມເປັນຈິງ ແລະ ເຮົາກຳລັງພະຍາຍາມຄົ້ນຫາບາງສິ່ງເພື່ອຕໍ່ຕ້ານຜູ້ຄົນບໍ? ເປັນຫຍັງຜູ້ຄົນຈຶ່ງ “ປະຕິບັດຕໍ່ເຮົາເປັນພິເສດ” ຢູ່ສະເໝີ? ເຮົາເປັນຄົນເຈັບໄຂ້ທີ່ຢູ່ໃນຫ້ອງຄົນເຈັບພິເສດຂອງເຂົາເອງບໍ? ເມື່ອສິ່ງຕ່າງໆໄດ້ມາເຖິງຈຸດທີ່ພວກມັນເປັນຢູ່ໃນປັດຈຸບັນເປັນຫຍັງຜູ້ຄົນຈຶ່ງຍັງຫຼຽວເບິ່ງເຮົາແບບຕ່າງເກົ່າ? ມີຂໍ້ຜິດພາດໃນທັດສະນະຄະຕິທີ່ເຮົາມີຕໍ່ມະນຸດບໍ? ໃນປັດຈຸບັນ, ເຮົາໄດ້ເລີ່ມຕົ້ນພາລະກິດໃໝ່ເໜືອຈັກກະວານ. ເຮົາໄດ້ມອບການເລີ່ມຕົ້ນໃໝ່ໃຫ້ກັບຜູ້ຄົນຢູ່ເທິງແຜ່ນດິນໂລກ ແລະ ເຮົາຂໍໃຫ້ພວກເຂົາທຸກຄົນຍ້າຍອອກຈາກເຮືອນຂອງເຮົາ. ຍ້ອນຜູ້ຄົນມັກໃສ່ໃຈພວກເຂົາເອງຢູ່ສະເໝີ, ເຮົາຈຶ່ງແນະນຳໃຫ້ພວກເຂົາຮູ້ຈັກຖານະຕົນເອງ ແລະ ບໍ່ລົບກວນພາລະກິດຂອງເຮົາຢູ່ຕະຫຼອດ. ໃນ “ບ້ານພັກ” ທີ່ເຮົາໄດ້ເປີດ, ບໍ່ມີຫຍັງດົນໃຈໃຫ້ເຮົາຮູ້ສຶກລັງກຽດຫຼາຍໄປກວ່າມະນຸດ, ຍ້ອນຜູ້ຄົນສ້າງບັນຫາໃຫ້ກັບເຮົາ ແລະ ເຮັດໃຫ້ເຮົາຜິດຫວັງຢູ່ສະເໝີ. ພຶດຕິກຳຂອງພວກເຂົານຳຄວາມອັບອາຍມາໃຫ້ກັບເຮົາ ແລະ ເຮົາບໍ່ເຄີຍໄດ້ ເຊີດໜ້າຊູຕາຈັກເທື່ອ. ສະນັ້ນເຮົາຈຶ່ງເວົ້າກັບພວກເຂົາຢ່າງໃຈເຢັນ, ຂໍໃຫ້ພວກເຂົາອອກຈາກເຮືອນຂອງເຮົາໃຫ້ໄວເທົ່າທີ່ຈະໄວໄດ້ ແລະ ເຊົາກິນອາຫານຂອງເຮົາລ້າໆ. ຖ້າພວກເຂົາປາຖະໜາທີ່ຈະຄົງຢູ່, ແລ້ວພວກເຂົາກໍຕ້ອງຜ່ານການທົນທຸກ ແລະ ອົດກັ້ນຕໍ່ການຕີສອນຂອງເຮົາ. ໃນຄວາມຄິດຂອງພວກເຂົາ, ເຮົາບໍ່ຮູ້ຫຍັງໝົດເລີຍ ແລະ ບໍ່ຮູ້ຈັກເຖິງການກະທຳຂອງພວກເຂົາ ແລະ ສະນັ້ນ ພວກເຂົາຈຶ່ງຢືນຢ່າງພາກພູມໃຈຕໍ່ໜ້າເຮົາໂດຍບໍ່ມີສັນຍານວ່າຈະລົ້ມລົງເລີຍ, ພຽງແຕ່ທຳທ່າເປັນມະນຸດເພື່ອເພີ່ມເຕີມຈຳນວນ. ເມື່ອເຮົາຮຽກຮ້ອງຈາກຜູ້ຄົນ, ພວກເຂົາກໍປະຫຼາດໃຈ: ພວກເຂົາບໍ່ເຄີຍຄິດວ່າ ພຣະເຈົ້າທີ່ມີທຳມະຊາດແສນດີ ແລະ ເມດຕາເປັນເວລາຫຼາຍປີ ຈະເວົ້າພຣະທຳດັ່ງກ່າວໄດ້ ເຊິ່ງເປັນພຣະທຳທີ່ໄຮ້ຫົວໃຈ ແລະ ໄຮ້ເຫດຜົນ ແລະ ແລ້ວພວກເຂົາກໍເວົ້າບໍ່ອອກ. ໃນເວລາດັ່ງກ່າວ ເຮົາເຫັນວ່າຄວາມກຽດຊັງໃນຫົວໃຈຂອງຜູ້ຄົນທີ່ມີຕໍ່ເຮົາໄດ້ກໍ່ຕົວອີກຄັ້ງ, ເພາະພວກເຂົາໄດ້ເລີ່ມຕົ້ນປະຕິບັດພາລະກິດແຫ່ງການຕໍ່ວ່າອີກຄັ້ງ. ພວກເຂົາກ່າວໂທດແຜ່ນດິນໂລກ ແລະ ສາບແຊ່ງສະຫວັນຢູ່ສະເໝີ. ແຕ່ໃນຄຳເວົ້າຂອງພວກເຂົາ, ເຮົາບໍ່ເຄີຍຄົ້ນພົບຄຳໃດເລີຍທີ່ສາບແຊ່ງພວກເຂົາເອງ ຍ້ອນຄວາມຮັກທີ່ພວກເຂົາມີຕໍ່ຕົນເອງແມ່ນຍິ່ງໃຫຍ່ຫຼາຍ. ສະນັ້ນ ເຮົາຈຶ່ງສະຫຼຸບຄວາມໝາຍຂອງຊີວິດມະນຸດວ່າ ຍ້ອນຜູ້ຄົນຮັກຕົນເອງຫຼາຍເກີນໄປ, ຊີວິດທັງໝົດຂອງພວກເຂົາຈຶ່ງເຈັບປວດ ແລະ ວ່າງເປົ່າ ແລະ ພວກເຂົາກໍນຳພາຄວາມພິນາດ

ມາຫາຫົວພວກເຂົາເອງ ຍ້ອນຄວາມກຽດຊັງທີ່ພວກເຂົາມີໃຫ້ກັບເຮົາ.

ເຖິງແມ່ນວ່າຈະມີ "ຄວາມຮັກ" ໃນຄຳເວົ້າທີ່ນັບບໍ່ຖ້ວນຂອງມະນຸດ, ເມື່ອເຮົານຳຄຳເວົ້າເຫຼົ່ານີ້ໄປທີ່ "ຫ້ອງທົດລອງ" ເພື່ອທົບສອບ ແລະ ສັງເກດພວກມັນພາຍໃຕ້ກ້ອງຈຸລະທັດ, ສິ່ງທີ່ຢູ່ພາຍໃນພວກມັນລ້ວນແລ້ວແຕ່ຖືກເປີດເຜີຍອອກຢ່າງຊັດເຈນທີ່ສຸດ. ໃນຊ່ວງເວລານີ້, ເຮົາໄດ້ມາທ່າມກາງມະນຸດອີກຄັ້ງເພື່ອໃຫ້ພວກເຂົາເບິ່ງ "ບົດບັນທຶກທາງການແພດ" ຂອງພວກເຂົາ, ເພື່ອເຮັດໃຫ້ພວກເຂົາເຊື່ອຢ່າງຈິງໃຈ. ເມື່ອຜູ້ຄົນເຫັນສິ່ງເຫຼົ່ານີ້, ໃບໜ້າຂອງພວກເຂົາກໍເຕັມໄປດ້ວຍຄວາມໂສກເສົ້າ, ພວກເຂົາຮູ້ສຶກເສຍໃຈໃນໃຈຂອງພວກເຂົາ ແລະ ພວກເຂົາເຖິງກັບກັງວົນຫຼາຍຈົນພວກເຂົາປາຖະໜາຢາກປະຖິ້ມຫົນທາງທີ່ຊົ່ວຮ້າຍຂອງພວກເຂົາ ແລະ ກັບຄືນສູ່ເສັ້ນທາງທີ່ຖືກຕ້ອງເພື່ອເຮັດໃຫ້ເຮົາມີຄວາມສຸກ. ເມື່ອໄດ້ເຫັນເຖິງຄວາມເດັດດ່ຽວຂອງພວກເຂົາ, ເຮົາກໍດີໃຈຫຼາຍທີ່ສຸດ, ເຮົາເຕັມໄປດ້ວຍຄວາມຊື່ນຊົມຍິນດີ: "ເທິງແຜ່ນດິນໂລກ, ຈະມີຜູ້ໃດນອກຈາກມະນຸດທີ່ສາມາດແບ່ງປັນຄວາມປິຕິຍິນດີ, ຄວາມໂສກເສົ້າ ແລະ ຄວາມທຸກຍາກກັບເຮົາ? ບໍ່ແມ່ນມີແຕ່ມະນຸດຄົນດຽວບໍ?" ແຕ່ເມື່ອເຮົາຈາກໄປ, ຜູ້ຄົນກໍຈີກບົດບັນທຶກທາງການແພດຂອງພວກເຂົາ ແລະ ໂຍນພວກມັນລົງພື້ນກ່ອນທີ່ຈະຍ່າງໜີໄປ. ຕັ້ງແຕ່ມື້ນັ້ນເປັນຕົ້ນມາ ເຮົາກໍໄດ້ເຫັນການກະທຳໜ້ອຍດຽວຂອງມະນຸດທີ່ເປັນທີ່ພໍໃຈຂອງເຮົາ. ແຕ່ຄວາມຕັ້ງໃຈຂອງພວກເຂົາທີ່ຢູ່ຕໍ່ໜ້າເຮົາແມ່ນສະສົມຢ່າງຫຼວງຫຼາຍ ແລະ ເມື່ອຫຼຽວເບິ່ງຄວາມຕັ້ງໃຈຂອງພວກເຂົາແລ້ວ ເຮົາແມ່ນຮູ້ສຶກເບື່ອໜ່າຍຫຼາຍ, ຍ້ອນບໍ່ມີຫຍັງໃນພວກເຂົາທີ່ສາມາດຖືກຍົກຂຶ້ນເພື່ອຄວາມສຸກຂອງເຮົາໄດ້ເລີຍ, ສິ່ງເຫຼົ່ານັ້ນມີມົນທິນຫຼາຍເກີນໄປ. ເມື່ອເຫັນເຖິງການທີ່ເຮົາບໍ່ເອົາໃຈໃສ່ຕໍ່ຄວາມຕັ້ງໃຈຂອງພວກເຂົາ, ຜູ້ຄົນກໍເລີ່ມເຢັນຊາ. ຫຼັງຈາກນັ້ນ, ພວກເຂົາກໍບໍ່ຄ່ອຍສົ່ງ "ໃບສະໝັກ" ມາເລີຍ ເພາະຫົວໃຈຂອງມະນຸດບໍ່ເຄີຍຖືກຍົກຍ້ອງເມື່ອຢູ່ຕໍ່ໜ້າເຮົາ ແລະ ມີແຕ່ພົບກັບການປະຕິເສດຂອງເຮົາ, ບໍ່ມີການສະໜັບສະໜູນຝ່າຍວິນຍານໃນຊີວິດຂອງຜູ້ຄົນອີກຕໍ່ໄປ ແລະ ດ້ວຍເຫດນັ້ນ ຄວາມກະຕືລືລົ້ນຂອງພວກເຂົາກໍຫາຍໄປ ແລະ ເຮົາບໍ່ຮູ້ສຶກເຖິງອາກາດກຳລັງ "ຮ້ອນເຜົາ" ອີກເລີຍ. ຜູ້ຄົນທົນທຸກຫຼາຍຢ່າງຕະຫຼອດຊີວິດຂອງພວກເຂົາ ຈົນເຖິງຈຸດທີ່ວ່າ ດ້ວຍການມາເຖິງຂອງສະຖານະການໃນປັດຈຸບັນ, ພວກເຂົາແມ່ນຖືກເຮົາ "ທໍລະມານ" ຫຼາຍຈົນພວກເຂົາວົນວຽນຢູ່ລະຫວ່າງຊີວິດ ແລະ ຄວາມຕາຍ; ຜົນຕາມມາກໍຄື ແສງສະຫວ່າງໃນໃບໜ້າຂອງພວກເຂົາມືດລົງ ແລະ ພວກເຂົາກໍສູນເສຍ "ຄວາມມີຊີວິດຊີວາ" ຂອງພວກເຂົາ, ຍ້ອນພວກເຂົາທຸກຄົນໄດ້ "ເຕີບໃຫຍ່" ໝົດແລ້ວ. ເຮົາບໍ່ສາມາດທົນເຫັນສະພາບທີ່ເປັນຕາສົງສານຂອງຜູ້ຄົນໄດ້ ເມື່ອພວກເຂົາຖືກຫຼົ່ຫຼອມໃນລະຫວ່າງການຂ້ຽນຕີ, ແຕ່ຜູ້ໃດສາມາດໄຖ່ໂທດຄວາມພ່າຍແພ້ທີ່ໜ້າສັງເວດຂອງມະນຸດຊາດໄດ້? ຜູ້ໃດສາມາດຊ່ວຍມະນຸດໃຫ້ລອດພົ້ນຈາກຊີວິດທີ່ໜ້າອະນາດຂອງມະນຸດໄດ້? ເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດປົດປ່ອຍພວກເຂົາເອງອອກຈາກທະເລເລິກແຫ່ງຄວາມທຸກທໍລະມານໄດ້? ເຮົາຕັ້ງໃຈໃສ່ແຮ້ວຜູ້ຄົນໃຫ້ຕິດກັບບໍ? ຜູ້ຄົນບໍ່ເຄີຍເຂົ້າໃຈເຖິງອາລົມຂອງເຮົາ ແລະ ສະນັ້ນ ເຮົາຈຶ່ງຄ່ຳຄວນໄປທົ່ວຈັກກະວານວ່າ ໃນບັນດາສິ່ງຕ່າງໆໃນສະຫວັນ ແລະ ເທິງແຜ່ນດິນໂລກ, ບໍ່ມີຫຍັງເຄີຍຮັບຮູ້ເຖິງຫົວໃຈຂອງເຮົາຈັກເທື່ອ ແລະ ບໍ່ມີຫຍັງຮັກເຮົາຢ່າງແທ້ຈິງ. ແມ່ນແຕ່ໃນປັດຈຸບັນ, ເຮົາຍັງບໍ່

ຮູ້ຈັກວ່າ ເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດຮັກເຮົາໄດ້. ພວກເຂົາສາມາດມອບຫົວໃຈຂອງພວກເຂົາໃຫ້ກັບເຮົາ, ພວກເຂົາສາມາດເສຍສະຫຼະໂຊກຊະຕາຂອງພວກເຂົາເພື່ອເຮົາ, ແຕ່ເປັນຫຍັງພວກເຂົາຈຶ່ງບໍ່ສາມາດມອບຄວາມຮັກຂອງພວກເຂົາໃຫ້ກັບເຮົາ? ພວກເຂົາບໍ່ມີສິ່ງທີ່ເຮົາຮຽກຮ້ອງບໍ? ຜູ້ຄົນສາມາດຮັກທຸກສິ່ງຍົກເວັ້ນເຮົາ, ແລ້ວເປັນຫຍັງພວກເຂົາຈຶ່ງບໍ່ສາມາດຮັກເຮົາໄດ້? ເປັນຫຍັງຄວາມຮັກຂອງພວກເຂົາຈຶ່ງລີ້ລັບຢູ່ສະເໝີ? ເມື່ອ ພວກເຂົາໄດ້ຢືນຢູ່ຕໍ່ໜ້າເຮົາຈົນເຖິງປັດຈຸບັນ, ເປັນຫຍັງເຮົາຈຶ່ງບໍ່ເຄີຍເຫັນຄວາມຮັກຂອງພວກເຂົາຈັກເທື່ອ? ນີ້ແມ່ນສິ່ງທີ່ພວກເຂົາຂາດເຂີນບໍ? ເຮົາຕັ້ງໃຈເຮັດໃຫ້ສິ່ງຕ່າງໆຫຍຸ້ງຍາກສຳລັບຜູ້ຄົນບໍ? ພວກເຂົາຍັງລັງເລໃນຫົວໃຈຂອງພວກເຂົາຢູ່ບໍ? ພວກເຂົາຢ້ານຮັກຄົນຜິດ ແລະ ບໍ່ສາມາດແກ້ໄຂຕົນເອງບໍ? ໃນຜູ້ຄົນ ມີຂໍ້ເລິກລັບຈຳນວນຫຼວງຫຼາຍທີ່ບໍ່ສາມາດຢັ່ງເຖິງໄດ້ ແລະ ສະນັ້ນ ເຮົາຈຶ່ງ "ບໍ່ກ້າ ແລະ ຂີ້ຢ້ານ" ຢູ່ສະເໝີເມື່ອຢູ່ຕໍ່ໜ້າມະນຸດ.

ໃນປັດຈຸບັນ, ໃນເວລາທີ່ກຳລັງກ້າວໜ້າໄປສູ່ປະຕູແຫ່ງອານາຈັກ, ທຸກຄົນກໍເລີ່ມກ້າວໜ້າໄປຢ່າງໄວ, ແຕ່ເມື່ອພວກເຂົາມາເຖິງຕໍ່ໜ້າປະຕູ, ເຮົາກໍປິດປະຕູ, ເຮົາອັດປະຜູ້ຄົນໄວ້ຢູ່ຂ້າງນອກ ແລະ ຮຽກຮ້ອງໃຫ້ພວກເຂົາສະແດງບັດຜ່ານເຂົ້າປະຕູຂອງພວກເຂົາ. ການກະທຳທີ່ປະຫຼາດດັ່ງກ່າວຂັດກັບສິ່ງທີ່ຜູ້ຄົນຄາດຫວັງທັງໝົດ ແລະ ພວກເຂົາທຸກຄົນກໍປະຫຼາດໃຈ. ເປັນຫຍັງປະຕູທີ່ເປີດກວ້າງຢູ່ສະເໝີ ມື້ນີ້ຈຶ່ງອັດແຈບຢ່າງທັນທີ? ຜູ້ຄົນກະທືບຕີນຂອງພວກເຂົາ ແລະ ຍ່າງໄປຍ່າງມາ. ພວກເຂົາຈິນຕະນາການວ່າ ພວກເຂົາສາມາດໃຊ້ອຸບາຍເພື່ອຫາທາງເຂົ້າ, ແຕ່ເມື່ອພວກເຂົາຍື່ນບັດຜ່ານເຂົ້າປະຕູປອມຂອງພວກເຂົາໃຫ້ກັບເຮົາ, ເຮົາກໍໂຍນພວກເຂົາຖິ້ມໃນຂຸມໄຟໃນທີ່ນັ້ນ ແລະ ຫຼັງຈາກນັ້ນ ເມື່ອໄດ້ເຫັນເຖິງ "ຄວາມພະຍາຍາມຢ່າງເຈັບປວດ" ຂອງພວກເຂົາເອງເຜົາໄໝ້, ພວກເຂົາກໍສູນເສຍຄວາມຫວັງ. ພວກເຂົາຈັບຫົວຂອງພວກເຂົາ, ຮ້ອງໄຫ້, ເບິ່ງທິວທັດທີ່ສວຍງາມພາຍໃນອານາຈັກແຕ່ບໍ່ສາມາດເຂົ້າໄປໄດ້. ແຕ່ເຮົາບໍ່ຍອມໃຫ້ພວກເຂົາເຂົ້າ ຍ້ອນສະພາບທີ່ເປັນຕາເວດທະນາຂອງພວກເຂົາ ພວກເຂົາຈະລົບກວນແຜນການຂອງເຮົາແນວໃດກໍຕາມໃຈພວກເຂົາ? ພອນຂອງອະນາຄົດທີ່ມອບໃຫ້ນັ້ນແລກປ່ຽນກັບຄວາມກະຕືລືລົ້ນຂອງຜູ້ຄົນໄດ້ບໍ? ຄວາມໝາຍຂອງການເປັນຢູ່ຂອງມະນຸດແມ່ນຢູ່ໃນການເຂົ້າສູ່ສະຫວັນຕາມທີ່ເຂົາພໍໃຈບໍ? ເຮົາຕໍ່າຊ້າຫຼາຍບໍ? ຖ້າບໍ່ແມ່ນຍ້ອນພຣະທຳທີ່ຮຸນແຮງຂອງເຮົາ, ຜູ້ຄົນຈະບໍ່ໄດ້ເຂົ້າສູ່ອານາຈັກແຕ່ດົນແລ້ວບໍ? ສະນັ້ນ ຜູ້ຄົນຈຶ່ງກຽດຊັງເຮົາຢູ່ສະເໝີຍ້ອນການເປັນຢູ່ຂອງເຮົາສ້າງຄວາມຫຍຸ້ງຍາກໃຫ້ກັບພວກເຂົາ. ຖ້າເຮົາບໍ່ມີຢູ່, ທຸກມື້ນີ້ ພວກເຂົາກໍຈະສາມາດໄດ້ຮັບພອນແຫ່ງອານາຈັກ ແລະ ຈຳເປັນຫຍັງທີ່ຕ້ອງມີການອົດກັ້ນຕໍ່ຄວາມທົນທຸກນີ້? ສະນັ້ນ ເຮົາຈຶ່ງບອກຜູ້ຄົນວ່າ ພວກເຂົາຄວນຈາກໄປດີກວ່າ, ພວກເຂົາຄວນຖືເອົາໂອກາດທີ່ສິ່ງຕ່າງໆກຳລັງດຳເນີນໄປໄດ້ດີໃນປັດຈຸບັນເພື່ອຄົ້ນພົບທາງອອກໃຫ້ກັບພວກເຂົາເອງ; ພວກເຂົາຄວນສວຍໂອກາດຈາກປັດຈຸບັນ, ໃນຂະນະທີ່ພວກເຂົາຍັງໜຸ່ມ, ຮຽນຮູ້ທັກສະບາງຢ່າງ. ຖ້າພວກເຂົາບໍ່ເຮັດແບບນັ້ນ, ໃນອະນາຄົດ ມັນກໍຈະຊ້າເກີນໄປ. ໃນເຮືອນຂອງເຮົາ, ບໍ່ມີໃຜເຄີຍໄດ້ຮັບພອນຈັກເທື່ອ. ເຮົາບອກກັບທຸກຄົນໃຫ້ຟ້າວໜີໄປ, ຢ່າຍຶດຕິດກັບການດຳລົງຊີວິດໃນ "ຄວາມທຸກຍາກ" ເລີຍ; ໃນອະນາຄົດ ມັນຈະຊ້າເກີນໄປທີ່ຈະເສຍໃຈ. ຢ່າກົດດັນໂຕເອງຫຼາຍເກີນໄປ; ເປັນຫຍັງຕ້ອງເຮັດໃຫ້

ຕົນເອງລຳບາກ? ແຕ່ເຮົາຍັງບອກຜູ້ຄົນວ່າ ເມື່ອພວກເຂົາລົ້ມເຫຼວໃນການຮັບພອນ, ບໍ່ມີໃຜສາມາດຕໍ່ວ່າເຮົາໄດ້. ເຮົາບໍ່ມີເວລາທີ່ຈະມາສິ້ນເປືອງພຣະທຳຂອງເຮົາກັບມະນຸດ. ເຮົາຫວັງວ່າ ສິ່ງນີ້ຈະຍັງຢູ່ໃນຄວາມຄິດຂອງຜູ້ຄົນ, ພວກເຂົາຈະບໍ່ລືມມັນ, ພຣະທຳເຫຼົ່ານີ້ແມ່ນຄວາມຈິງຢ່າງທຸກໃຈທີ່ເຮົາມອບໃຫ້. ເຮົາເສຍຄວາມສັດທາໃນມະນຸດຕັ້ງແຕ່ດົນແລ້ວ ແລະ ເຮົາເສຍຄວາມຫວັງໃນຜູ້ຄົນຕັ້ງແຕ່ດົນແລ້ວ, ຍ້ອນພວກເຂົາຂາດຄວາມທະເຍີທະຍານ, ພວກເຂົາບໍ່ເຄີຍສາມາດທີ່ຈະມອບຫົວໃຈທີ່ຮັກພຣະເຈົ້າໃຫ້ກັບເຮົາ ແຕ່ກົງກັນຂ້າມ ມອບແຮງຈູງໃຈຂອງພວກເຂົາໃຫ້ກັບເຮົາແທນ. ເຮົາໄດ້ເວົ້າຫຼາຍຢ່າງກັບມະນຸດ ແລະ ຍ້ອນທຸກມື້ນີ້ມະນຸດຍັງເມີນເສີຍຕໍ່ຄຳແນະນຳຂອງເຮົາ, ເຮົາຈຶ່ງບອກພວກເຂົາຈາກມຸມມອງຂອງເຮົາ ເພື່ອປ້ອງກັນບໍ່ໃຫ້ພວກເຂົາເຂົ້າໃຈຜິດກ່ຽວກັບຫົວໃຈຂອງເຮົາໃນອະນາຄົດ; ບໍ່ວ່າພວກເຂົາຈະຢູ່ ຫຼື ຕາຍໃນອະນາຄົດ ມັນກໍເປັນເລື່ອງຂອງພວກເຂົາ, ເຮົາບໍ່ໄດ້ຄວບຄຸມເໜືອສິ່ງນີ້. ເຮົາຫວັງວ່າພວກເຂົາຈະຄົ້ນພົບເສັ້ນທາງຂອງພວກເຂົາເອງໃນການຢູ່ລອດ. ເຮົາບໍ່ມີອຳນາດໃນສິ່ງນີ້. ໃນເມື່ອມະນຸດບໍ່ຮັກເຮົາຢ່າງແທ້ຈິງ, ພວກເຮົາກໍແຍກທາງກັນ; ໃນອະນາຄົດກໍຈະບໍ່ມີພຣະທຳລະຫວ່າງເຮົາອີກຕໍ່ໄປ, ພວກເຮົາຈະບໍ່ມີຫຍັງໃຫ້ເວົ້າອີກຕໍ່ໄປ, ພວກເຮົາຈະບໍ່ແຊກແຊງກັນ ແລະ ກັນ, ພວກເຮົາແຕ່ລະຄົນຈະໄປຕາມທາງຂອງພວກເຮົາເອງ, ຜູ້ຄົນບໍ່ຕ້ອງມາຊອກຫາເຮົາ, ເຮົາຈະບໍ່ຂໍ "ຄວາມຊ່ວຍເຫຼືອ" ຈາກມະນຸດອີກຈັກເທື່ອ. ນີ້ແມ່ນສິ່ງທີ່ກີດກັ້ນລະຫວ່າງພວກເຮົາ ແລະ ພວກເຮົາໄດ້ເວົ້າແບບບໍ່ອ້ອມຄ້ອມເພື່ອປ້ອງກັນບໍ່ໃຫ້ມີບັນຫາໃນອະນາຄົດ. ແລ້ວນີ້ບໍ່ໄດ້ເຮັດໃຫ້ສິ່ງຕ່າງໆງ່າຍຂຶ້ນບໍ? ພວກເຮົາແຕ່ລະຄົນກໍໄປຕາມທາງຂອງພວກເຮົາເອງ ແລະ ບໍ່ມີຫຍັງກ່ຽວຂ້ອງກັນ, ມີບັນຫາຫຍັງບໍກັບສິ່ງນີ້? ເຮົາຫວັງວ່າຜູ້ຄົນຈະພິຈາລະນາເລື່ອງນີ້.

ວັນທີ 28 ພຶດສະພາ 1992

# ບົດທີ 47

ເພື່ອເຮັດໃຫ້ຊີວິດຂອງມວນມະນຸດມີວຸດທິພາວະ ແລະ ເພື່ອວ່າ ມະນຸດຊາດ ແລະ ເຮົາຈະສາມາດບັນລຸຜົນດ້ວຍອຸດົມຄະຕິຮ່ວມກັນ ເຮົາຈຶ່ງໄດ້ອະນຸໂລມໃຫ້ແກ່ມະນຸດຕະຫຼອດ ໂດຍຍອມໃຫ້ພວກເຂົາໄດ້ຮັບສິ່ງບໍາລຸງ ແລະ ການບໍາລຸງລ້ຽງຈາກພຣະທໍາຂອງເຮົາ ແລະ ເພື່ອໃຫ້ໄດ້ຮັບຄວາມອຸດົມສົມບູນທັງໝົດຂອງເຮົາ. ເຮົາບໍ່ເຄີຍມອບຄວາມອັບອາຍໃຫ້ແກ່ມວນມະນຸດ ແຕ່ມະນຸດບໍ່ເຄີຍພິຈາລະນາເຖິງຄວາມຮູ້ສຶກຂອງເຮົາເລີຍ. ນີ້ກໍຍ້ອນວ່າ ມະນຸດບໍ່ມີຄວາມຮູ້ສຶກ ແລະ "ກຽດຊັງ" ທຸກສິ່ງນອກຈາກເຮົາ. ເນື່ອງຈາກຄວາມບົກຜ່ອງຂອງພວກເຂົາ, ເຮົາຈຶ່ງຂ້ອນຂ້າງຈະເຫັນອົກເຫັນໃຈພວກເຂົາ; ດ້ວຍເຫດນັ້ນ ເຮົາຈຶ່ງໃຊ້ຄວາມພະຍາຍາມຫຼາຍຂຶ້ນກັບມະນຸດ ເພື່ອວ່າ ພວກເຂົາອາດໄດ້ມີຄວາມສຸກຈົນກວ່າຈະພໍໃຈກັບຄວາມອຸດົມສົມບູນທັງໝົດເທິງແຜ່ນດິນໂລກ ໃນໄລຍະເວລາທີ່ພວກເຂົາມີຊີວິດຢູ່ໃນໂລກ. ເຮົາບໍ່ໄດ້ປະຕິບັດກັບຜູ້ຄົນຢ່າງບໍ່ຍຸຕິທໍາ ແລະ ເມື່ອພິຈາລະນາເຖິງໄລຍະເວລາທີ່ພວກເຂົາໄດ້ຕິດຕາມເຮົາເປັນເວລາຫຼາຍປີ ເຮົາກໍໃຈອ່ອນສໍາລັບພວກເຂົາ. ມັນຄືກັບວ່າ ເຮົາບໍ່ສາມາດທົນປະຕິບັດພາລະກິດຂອງເຮົາກັບມະນຸດເຫຼົ່ານີ້ໄດ້. ດ້ວຍເຫດນັ້ນ ການເຫັນຄົນຈ່ອຍເຫຼືອງເຫຼົ່ານີ້ ທີ່ຮັກເຮົາ ຄືກັບພວກເຂົາຮັກຕົວເອງ ຈຶ່ງເຮັດໃຫ້ໃຈຂອງເຮົາມີຄວາມຮູ້ສຶກເຈັບປວດຢ່າງໜັກ ແຕ່ໃຜຈະເຮັດຜິດທໍານຽມຍ້ອນສິ່ງນີ້? ໃຜຈະລົບກວນຕົວເອງຍ້ອນສິ່ງນີ້? ຢ່າງໃດກໍຕາມ ເຮົາໄດ້ມອບລາງວັນຂອງເຮົາໃຫ້ກັບມະນຸດ ເພື່ອວ່າ ພວກເຂົາຈະສາມາດມີຄວາມສຸກກັບມັນຢ່າງເຕັມທີ່ ແລະ ກ່ຽວກັບເລື່ອງນີ້ ເຮົາແມ່ນບໍ່ໄດ້ປະຕິບັດໃນທາງທີ່ບໍ່ດີກັບມະນຸດ. ນີ້ແມ່ນເຫດຜົນທີ່ມວນມະນຸດຍັງເຫັນໃບໜ້າທີ່ມີຄວາມເມດຕາ ແລະ ກະລຸນາຂອງເຮົາ. ເຮົາໄດ້ອົດທົນມາຕະຫຼອດ ແລະ ເຮົາໄດ້ລໍຖ້າມາຕະຫຼອດ. ເມື່ອມະນຸດໄດ້ມີຄວາມສຸກພຽງພໍແລ້ວ ແລະ ເລີ່ມມີຄວາມເບື່ອ, ໃນເວລານັ້ນ ເຮົາກໍຈະເລີ່ມ "ຕອບສະໜອງ" ຄໍາຮ້ອງຂໍຂອງພວກເຂົາ ແລະ ຈະຍອມໃຫ້ມະນຸດທຸກຄົນໜີອອກຈາກຊີວິດທີ່ວ່າງເປົ່າຂອງພວກເຂົາ ແລະ ບໍ່ເຄີຍມີຄວາມກ່ຽວຂ້ອງກັບມະນຸດຊາດອີກຕໍ່ໄປ. ຢູ່ເທິງແຜ່ນດິນໂລກ ເຮົາໄດ້ໃຊ້ນໍ້າທະເລ ເພື່ອກືນເອົາມວນມະນຸດ, ຄວບຄຸມພວກເຂົາດ້ວຍຄວາມອຶດຢາກ, ຂົ່ມຂູ່ພວກເຂົາດ້ວຍໂລກລະບາດຈາກແມງໄມ້ ແລະ ໃຊ້ຝົນທີ່ຕົກໜັກເພື່ອ "ຫົດນໍ້າ" ພວກເຂົາ ແຕ່ພວກເຂົາກໍບໍ່ເຄີຍຮູ້ສຶກເຖິງຄວາມວ່າງເປົ່າຂອງຊີວິດເລີຍ. ແມ່ນແຕ່ຕອນນີ້ ຜູ້ຄົນຍັງບໍ່ເຂົ້າໃຈຄວາມໝາຍຂອງການດໍາລົງຊີວິດຢູ່ເທິງແຜ່ນດິນໂລກ. ເປັນໄປໄດ້ບໍ ທີ່ການດໍາລົງຊີວິດຢູ່ຕໍ່ໜ້າເຮົາ ແມ່ນຄວາມໝາຍທີ່ເລິກເຊິ່ງທີ່ສຸດຂອງຊີວິດມະນຸດ? ການມາຢູ່ໃກ້ເຮົາສາມາດເຮັດໃຫ້ຄົນໜຶ່ງໜີຈາກໄພຄຸກຄາມໄດ້ບໍ? ມີຈັກຄົນເທິງແຜ່ນດິນໂລກທີ່ຢູ່ໃນເນື້ອໜັງ ທີ່ໄດ້ອາໄສຢູ່ໃນສະພາບທີ່ເປັນອິດສະຫຼະກັບຄວາມສຸກຂອງຕົວເອງ? ມີຜູ້ໃດແດ່ທີ່ໄດ້ໜີຈາກຄວາມວ່າງເປົ່າຂອງການອາໄສຢູ່ໃນເນື້ອໜັງ? ແລ້ວມີໃຜທີ່ສາມາດຮູ້ເຖິງສິ່ງນີ້? ນັບແຕ່ເຮົາໄດ້ສ້າງມວນມະນຸດຂຶ້ນມາ ບໍ່ມີໃຜສາມາດດໍາລົງຊີວິດທີ່ມີຄວາມໝາຍທີ່ສຸດເທິງແຜ່ນດິນໂລກ ແລະ ດ້ວຍເຫດນີ້ ມວນມະນຸດຈຶ່ງເສຍເວລາຢູ່ກັບຊີວິດທີ່ບໍ່ສໍາຄັນເຫຼົ່ານີ້. ຢ່າງໃດກໍຕາມ ບໍ່ມີໃຜເຕັມໃຈທີ່ຈະໜີອອກຈາກສະພາບທີ່ລໍາບາກແບບນີ້ ແລະ

ບໍ່ມີໃຜເຕັມໃຈທີ່ຈະຫຼີກເວັ້ນຊີວິດທີ່ວ່າງເປົ່າ ແລະ ເບື່ອໜ່າຍນີ້. ໃນປະສົບການຂອງມວນມະນຸດ, ບໍ່ມີໃຜໃນບັນດາຜູ້ທີ່ດຳລົງຊີວິດຢູ່ໃນເນື້ອໜັງໄດ້ໜີຈາກທຳນຽມຂອງໂລກມະນຸດ ເຖິງແມ່ນວ່າພວກເຂົາຈະໄດ້ຮັບຜົນປະໂຫຍດໃນການຊົມຊື່ນເຮົາ. ກົງກັນຂ້າມ ພວກເຂົາປ່ອຍໃຫ້ເປັນໄປຕາມທຳມະຊາດຕະຫຼອດເວລາ ແລະ ສືບຕໍ່ຫຼອກລວງຕົນເອງ.

ເມື່ອເຮົາຢຸດຕິການມີຢູ່ຂອງມະນຸດຊາດ ມັນກໍຈະບໍ່ມີໃຜຫຼົງເຫຼືອຢູ່ເທິງແຜ່ນດິນໂລກ ເພື່ອອົດທົນຕໍ່ກັບ "ການຂົ່ມເຫັງ" ຂອງແຜ່ນດິນໂລກ; ມີພຽງແຕ່ຫຼັງຈາກນັ້ນ ຈຶ່ງຈະຖືວ່າ ພາລະກິດທີ່ຍິ່ງໃຫຍ່ຂອງເຮົາໄດ້ສຳເລັດລົງຢ່າງສົມບູນ. ໃນຍຸກສຸດທ້າຍ ເມື່ອເຮົາໄດ້ບັງເກີດເປັນມະນຸດ, ພາລະກິດທີ່ເຮົາປາດຖະໜາໃຫ້ບັນລຸແມ່ນການເຮັດໃຫ້ຜູ້ຄົນເຂົ້າໃຈຄວາມວ່າງເປົ່າຂອງການດຳລົງຊີວິດໃນເນື້ອໜັງ ແລະ ເຮົາຈະໃຊ້ໂອກາດນີ້ເພື່ອກຳຈັດເນື້ອໜັງ. ແລ້ວຫຼັງຈາກນັ້ນ ກໍຈະບໍ່ມີມະນຸດຄົນໃດມີຊີວິດຢູ່ເທິງແຜ່ນດິນໂລກນີ້ອີກ, ຈະບໍ່ມີໃຜຮ້ອງໄຫ້ກ່ຽວກັບຄວາມວ່າງເປົ່າຂອງແຜ່ນດິນໂລກນີ້ອີກຕໍ່ໄປ, ຈະບໍ່ມີໃຜເວົ້າກ່ຽວກັບຄວາມລຳບາກຂອງເນື້ອໜັງອີກຕໍ່ໄປ, ຈະບໍ່ມີການຕຳນິເຮົາວ່າ ບໍ່ຍຸຕິທຳອີກຕໍ່ໄປ ແລະ ທຸກຄົນ ແລະ ທຸກສິ່ງຈະເຂົ້າສູ່ຄວາມສະຫງົບສຸກ. ຫຼັງຈາກນັ້ນ, ມະນຸດຈະບໍ່ຟ້າວຟັ່ງໄປມາ, ຫຍຸ້ງຢູ່ກັບວຽກງານສະເໝີ ແລະ ພວກເຂົາຈະບໍ່ໄດ້ຊອກຫາບ່ອນນັ້ນບ່ອນນີ້ເທິງແຜ່ນດິນໂລກອີກຕໍ່ໄປ ເນື່ອງຈາກວ່າ ພວກເຂົາໄດ້ຄົ້ນພົບປາຍທາງທີ່ເໝາະສົມສຳລັບຕົວເອງແລ້ວ. ໃນເວລານັ້ນ, ຮອຍຍິ້ມກໍຈະປາກົດຂຶ້ນຢູ່ເທິງໃບໜ້າຂອງພວກເຂົາທຸກຄົນ. ຫຼັງຈາກນັ້ນ ເຮົາຈະບໍ່ຂໍຫຍັງຫຼາຍຈາກມວນມະນຸດ ແລະ ເຮົາຈະບໍ່ໂຕ້ຖຽງກັບພວກເຂົາເພີ່ມເຕີມ; ຈະບໍ່ມີສົນທິສັນຍາວ່າດ້ວຍຄວາມສັນຕິພາບລະຫວ່າງພວກເຮົາອີກຕໍ່ໄປ. ເຮົາມີຕົວຕົນຢູ່ເທິງແຜ່ນດິນໂລກ ແລະ ມະນຸດດຳລົງຊີວິດຢູ່ເທິງແຜ່ນດິນໂລກ; ເຮົາດຳລົງຢູ່ ແລະ ອາໄສຢູ່ກັບພວກເຂົາ. ພວກເຂົາທຸກຄົນຮູ້ສຶກເຖິງຄວາມສຸກກັບການປາກົດຢູ່ຂອງເຮົາ ເຊິ່ງດ້ວຍເຫດນີ້ ພວກເຂົາຈຶ່ງບໍ່ເຕັມໃຈທີ່ຈະຈາກໄປໂດຍບໍ່ມີເຫດຜົນ ແລະ ກົງກັນຂ້າມ ແມ່ນຢາກໃຫ້ເຮົາຢູ່ຕໍ່ອີກໜ້ອຍໜຶ່ງ. ເຮົາຈະສາມາດຢືນຢູ່ເພື່ອເປັນພະຍານໃຫ້ກັບຄວາມເສົ້າໃຈຂອງແຜ່ນດິນໂລກ ໂດຍທີ່ບໍ່ຍົກນິ້ວມືເພື່ອຊ່ວຍຫຍັງເລີຍໄດ້ແນວໃດ? ເຮົາບໍ່ໄດ້ມາຈາກແຜ່ນດິນໂລກ; ຍ້ອນຄວາມອົດທົນ ເຮົາຈຶ່ງບັງຄັບຕົວເອງ ເພື່ອໃຫ້ຢູ່ຕໍ່ໃນບ່ອນນີ້ຈົນຮອດປັດຈຸບັນ. ຖ້າບໍ່ແມ່ນຍ້ອນການອ້ອນວອນຢ່າງບໍ່ຈົບສິ້ນຂອງມວນມະນຸດ ເຮົາແມ່ນໄປແຕ່ດົນແລ້ວ. ດຽວນີ້ຜູ້ຄົນສາມາດເບິ່ງແຍງຕົວເອງ ແລະ ພວກເຂົາບໍ່ຕ້ອງການຄວາມຊ່ວຍເຫຼືອຈາກເຮົາ ຍ້ອນວ່າ ພວກເຂົາໄດ້ມີວຸດທິພາວະ ແລະ ບໍ່ຕ້ອງການໃຫ້ເຮົາປ້ອນພວກເຂົາອີກ. ສະນັ້ນ, ເຮົາຈຶ່ງວາງແຜນທີ່ຈະຈັດ "ງານສະເຫຼີມສະຫຼອງໄຊຊະນະ" ກັບມວນມະນຸດ ເຊິ່ງຫຼັງຈາກນັ້ນ ເຮົາກໍຈະອຳລາພວກເຂົາ ເພື່ອວ່າພວກເຂົາຈະບໍ່ໄດ້ບໍ່ຮູ້ສຶກຕົວ. ເປັນທີ່ແນ່ນອນຢູ່ແລ້ວວ່າ ການອຳລາຈາກກັນໃນຂະນະທີ່ຍັງຂັດແຍ້ງກັນຢູ່ນັ້ນ ບໍ່ແມ່ນສິ່ງທີ່ດີ ຍ້ອນວ່າ ບໍ່ໄດ້ມີຄວາມອາຄາດຫຍັງລະຫວ່າງພວກເຮົາ. ດ້ວຍເຫດນັ້ນ, ມິດຕະພາບລະຫວ່າງພວກເຮົາຈະມີຢູ່ຕະຫຼອດໄປ. ເຮົາຫວັງວ່າ ຫຼັງຈາກທີ່ພວກເຮົາຈາກກັນ ມະນຸດຈະສາມາດດຳເນີນ "ມູນມໍລະດົກ" ຂອງເຮົາຕໍ່ໄປ ແລະ ບໍ່ລືມຄຳສັ່ງສອນທີ່ເຮົາໄດ້ມອບໃຫ້ໃນເວລາທີ່ເຮົາມີຊີວິດຢູ່ ເຮົາຫວັງວ່າ ພວກເຂົາຈະບໍ່ເຮັດສິ່ງໃດໆທີ່ຈະເປັນການນຳເອົາຄວາມເສື່ອມເສຍມາສູ່ຊື່

ຂອງເຮົາ ແລະ ພວກເຂົາຈະຄິດເຖິງພຣະທຳຂອງເຮົາ. ເຮົາຫວັງວ່າ ມະນຸດທຸກຄົນຈະສາມາດໃຊ້ຄວາມພະຍາຍາມທັງໝົດຂອງພວກເຂົາ ເພື່ອເຮັດໃຫ້ເຮົາພໍໃຈ ຫຼັງຈາກທີ່ເຮົາໄດ້ຈາກໄປ ເຮົາຫວັງວ່າພວກເຂົາຈະນຳໃຊ້ພຣະທຳຂອງເຮົາເປັນພື້ນຖານຂອງຊີວິດຂອງພວກເຂົາ ແລະ ພວກເຂົາຈະບໍ່ລົ້ມເຫຼວໃນການດຳລົງຊີວິດຕາມຄວາມຫວັງຂອງເຮົາ ເນື່ອງຈາກວ່າ ໃຈຂອງເຮົາແມ່ນເປັນຫ່ວງມະນຸດສະເໝີ ແລະ ເຮົາມີຄວາມຜູກພັນກັບພວກເຂົາສະເໝີ. ມວນມະນຸດ ແລະ ເຮົາເຄີຍເຕົ້າໂຮມກັນຄັ້ງໜຶ່ງ ແລະ ພວກເຮົາມີຄວາມສຸກກັບພອນຢູ່ເທິງແຜ່ນດິນໂລກຄືກັບຢູ່ເທິງສະຫວັນ. ເຮົາດຳລົງຊີວິດຢູ່ຮ່ວມກັນກັບມະນຸດ ແລະ ອາໄສຢູ່ກັບພວກເຂົາ; ມະນຸດຮັກເຮົາສະເໝີ ແລະ ເຮົາກໍຮັກພວກເຂົາສະເໝີ. ພວກເຮົາມີຄວາມສຳພັນກັນຢ່າງໃກ້ຊິດ. ເມື່ອຫວນເບິ່ງຄືນຫຼັງ ເວລາຂອງເຮົາທີ່ໃຊ້ຮ່ວມກັນກັບມະນຸດ ເຮົາຈື່ວ່າ ມື້ຂອງພວກເຮົາແມ່ນເຕັມໄປດ້ວຍສຽງຫົວ ແລະ ຄວາມມ່ວນຊື່ນ ແລະ ພ້ອມດ້ວຍການຜິດຖຽງກັນນຳ. ຢ່າງໃດກໍຕາມ, ຄວາມຮັກລະຫວ່າງພວກເຮົາແມ່ນຖືກສ້າງຂຶ້ນບົນພື້ນຖານດັ່ງກ່າວນີ້ ແລະ ການພົວພັນເຊິ່ງກັນແລະກັນຂອງພວກເຮົາແມ່ນບໍ່ເຄີຍຖືກຕັດຂາດ. ໃນທ່າມກາງການຕິດຕໍ່ພົວພັນຂອງພວກເຮົາເປັນເວລາຫຼາຍປີ, ມວນມະນຸດໄດ້ມອບຄວາມປະທັບໃຈທີ່ເລິກເຊິ່ງໃຫ້ກັບເຮົາ ແລະ ເຮົາຍັງໄດ້ມອບຫຼາຍສິ່ງທີ່ຍິ່ງໃຫຍ່ໃຫ້ແກ່ມະນຸດເພື່ອຊົມຊື່ນ ເຊິ່ງພວກເຂົາແມ່ນຮູ້ບຸນຄຸນເປັນສອງເທົ່າສະເໝີ. ຕອນນີ້ ການເຕົ້າໂຮມຂອງພວກເຮົາຈະບໍ່ເປັນຄືເກົ່າອີກແລ້ວ; ມີໃຜແນ່ທີ່ສາມາດແລ່ນໜີຈາກຊ່ວງເວລາທີ່ພວກເຮົາຕ້ອງລາຈາກກັນນີ້? ມະນຸດມີຄວາມຮັກແພງທີ່ເລິກເຊິ່ງຕໍ່ເຮົາ ແລະ ເຮົາມີຄວາມຮັກທີ່ບໍ່ສິ້ນສຸດແກ່ພວກເຂົາ ແຕ່ສາມາດເຮັດຫຍັງໄດ້ແດ່ກັບສິ່ງນັ້ນ? ໃຜກ້າທີ່ຈະຝ່າຝືນຂໍ້ກຳນົດຂອງພຣະບິດາແຫ່ງສະຫວັນບໍ? ເຮົາຈະກັບຄືນສູ່ເຮືອນຂອງເຮົາ ເຊິ່ງເປັນບ່ອນທີ່ເຮົາຈະເຮັດພາລະກິດອີກສ່ວນໜຶ່ງຂອງເຮົາໃຫ້ສຳເລັດ. ບາງເທື່ອ ພວກເຮົາຈະມີໂອກາດພົບກັນອີກ. ເຮົາຫວັງວ່າ ມະນຸດຈະບໍ່ຮູ້ສຶກໂສກເສົ້າຫຼາຍ ແລະ ພວກເຂົາຈະເຮັດໃຫ້ເຮົາພໍໃຈຢູ່ເທິງແຜ່ນດິນໂລກ; ພຣະວິນຍານຂອງເຮົາໃນສະຫວັນຈະໃຫ້ພຣະຄຸນແກ່ພວກເຂົາເປັນປະຈຳ.

ໃນເວລາແຫ່ງການຊົງສ້າງ, ເຮົາໄດ້ທຳນາຍວ່າ ໃນຍຸກສຸດທ້າຍເຮົາຈະສ້າງກຸ່ມຄົນ ທີ່ມີຈິດໃຈດຽວຄືກັບເຮົາ. ເຮົາໄດ້ທຳນາຍລ່ວງໜ້າວ່າ ພາຍຫຼັງຈາກສ້າງຕົວຢ່າງຢູ່ເທິງແຜ່ນດິນໂລກໃນຍຸກສຸດທ້າຍ ເຮົາຈະກັບຄືນສູ່ເຮືອນຂອງເຮົາ. ເມື່ອມວນມະນຸດທຸກຄົນໄດ້ເຮັດໃຫ້ເຮົາພໍໃຈ ພວກເຂົາກໍຈະບັນລຸສິ່ງທີ່ເຮົາຮຽກຮ້ອງຈາກພວກເຂົາ ແລະ ເຮົາຈະບໍ່ຕ້ອງການໃຫ້ພວກເຂົາເຮັດຫຍັງອີກຕໍ່ໄປ. ກົງກັນຂ້າມ, ມະນຸດ ແລະ ເຮົາຈະແລກປ່ຽນເລື່ອງລາວກ່ຽວກັບອະດີດຜ່ານມາ ແລະ ຫຼັງຈາກນັ້ນພວກເຮົາກໍຈະລາຈາກກັນໄປ. ເຮົາໄດ້ເລີ່ມພາລະກິດນີ້ແລ້ວ ແລະ ໄດ້ອະນຸຍາດໃຫ້ມະນຸດກຽມຈິດໃຈຂອງພວກເຂົາໄວ້ແລ້ວ ແລະ ເພື່ອເຂົ້າໃຈເຈດຕະນາຂອງເຮົາ ເພື່ອວ່າ ພວກເຂົາຈະບໍ່ເຂົ້າໃຈຜິດ ໂດຍທີ່ຄິດວ່າ ເຮົາໂຫດຮ້າຍ ຫຼື ບໍ່ມີຫົວໃຈ ເຊິ່ງນັ້ນບໍ່ແມ່ນເຈດຕະນາຂອງເຮົາ. ມະນຸດຮັກເຮົາ ແຕ່ຍັງປະຕິເສດທີ່ຈະຍອມມອບບ່ອນພັກທີ່ເໝາະສົມໃຫ້ກັບເຮົາບໍ? ພວກເຂົາບໍ່ເຕັມໃຈທີ່ຈະອ້ອນວອນຕໍ່ພຣະບິດາແຫ່ງສະຫວັນໃນນາມຂອງເຮົາບໍ? ມະນຸດບໍ່ໄດ້ເສຍນໍ້າຕາຍ້ອນເຫັນອົກເຫັນໃຈເຮົາບໍ? ພວກເຂົາບໍ່ໄດ້ຊ່ວຍໃນການເຮັດໃຫ້ພວກເຮົາ ນັ້ນກໍຄື ພຣະບິດາ ແລະ ພຣະບຸດ ມາຢູ່ຮ່ວມກັນຢ່າງ

ສຳເລັດບໍ? ແລ້ວເປັນຫຍັງພວກເຂົາຈຶ່ງບໍ່ເຕັມໃຈໃນຕອນນີ້? ພັນທະກິດຂອງເຮົາເທິງແຜ່ນດິນໂລກແມ່ນສຳເລັດແລ້ວ ແລະ ພາຍຫຼັງການອຳລາຈາກມວນມະນຸດ ເຮົາຍັງຈະສືບຕໍ່ຊ່ວຍເຫຼືອພວກເຂົາ; ນີ້ບໍ່ດີບໍ? ເພື່ອໃຫ້ພາລະກິດຂອງເຮົາບັນລຸຜົນໄດ້ດີຂຶ້ນ ແລະ ເພື່ອວ່າ ມັນຈະເປັນປະໂຫຍດແກ່ທັງສອງຝ່າຍ ພວກເຮົາກໍຕ້ອງລາຈາກກັນ ເຖິງແມ່ນວ່າ ມັນຈະເຈັບປວດ. ຈົ່ງໃຫ້ນໍ້າຕາຂອງພວກເຮົາຕົກລົງຢ່າງງຽບໆ; ເຮົາຈະບໍ່ຕຳນິຕິເຕືອນມວນມະນຸດອີກຕໍ່ໄປ. ໃນອະດີດ ເຮົາໄດ້ເວົ້າຫຼາຍຢ່າງກັບຜູ້ຄົນເຊິ່ງທັງໝົດນັ້ນກໍໄດ້ແທງຫົວໃຈຂອງພວກເຂົາ ເຊິ່ງເຮັດໃຫ້ພວກເຂົາຫຼັ່ງນໍ້າຕາແຫ່ງຄວາມໂສກເສົ້າ. ຍ້ອນເຫດນັ້ນ ເຮົາຈຶ່ງຂໍອະໄພມາຍັງມວນມະນຸດ ແລະ ຂໍໃຫ້ພວກເຂົາຍົກໂທດໃຫ້. ເຮົາຂໍບໍ່ໃຫ້ພວກເຂົາກຽດຊັງເຮົາ ເນື່ອງຈາກວ່າ ນີ້ແມ່ນເພື່ອປະໂຫຍດທັງໝົດຂອງພວກເຂົາ. ສະນັ້ນ, ເຮົາຈຶ່ງຫວັງວ່າ ມະນຸດຈະເຂົ້າໃຈເຮົາ. ໃນອະດີດຕະການ, ພວກເຮົາເຄີຍມີຂໍ້ຜິດຖຽງກັນ ແຕ່ເມື່ອຫວນຫຼັງເບິ່ງຄືນແລ້ວ ພວກເຮົາທັງສອງແມ່ນໄດ້ປະຜົນໂຫຍດ. ຍ້ອນການຜິດຖຽງເຫຼົ່ານີ້ ພຣະເຈົ້າ ແລະ ມວນມະນຸດຈຶ່ງໄດ້ສ້າງຂົວຕໍ່ແຫ່ງມິດຕະພາບ. ນັ້ນບໍ່ແມ່ນໝາກຜົນຂອງການຮ່ວມມືຂອງພວກເຮົາບໍ? ພວກເຮົາຄວນມີຄວາມສຸກກັບສິ່ງນີ້. ເຮົາຂໍໃຫ້ມະນຸດຍົກໂທດແກ່ “ຂໍ້ຜິດພາດ” ຂອງເຮົາໃນທີ່ຜ່ານມາ ແລະ ການເຮັດຜິດຂອງພວກເຂົາກໍຈະຖືກລືມໄປເຊັ່ນກັນ. ຕາບໃດທີ່ພວກເຂົາສາມາດມອບຄວາມຮັກໃຫ້ແກ່ເຮົາໃນອະນາຄົດເພື່ອເປັນການຕອບແທນ ສິ່ງນັ້ນກໍຈະມອບຄວາມສຸກສະບາຍໃຫ້ແກ່ພຣະວິນຍານຂອງເຮົາຢູ່ເທິງສະຫວັນແລ້ວ. ເຮົາບໍ່ຮູ້ວ່າ ການຕັ້ງໃຈຢ່າງແນວແນ່ຂອງມວນມະນຸດກ່ຽວກັບສິ່ງນີ້ຄືຫຍັງ ແລະ ບໍ່ຮູ້ວ່າຜູ້ຄົນເຕັມໃຈທີ່ຈະເຮັດໃຫ້ເຮົາພໍໃຈຕາມການຮ້ອງຂໍຄັ້ງສຸດທ້າຍຂອງເຮົາ ຫຼື ບໍ່. ເຮົາບໍ່ໄດ້ຂໍຫຍັງອີກຈາກພວກເຂົາ ນອກຈາກຂໍໃຫ້ພວກເຂົາຮັກເຮົາເທົ່ານັ້ນ; ນັ້ນກໍພຽງພໍແລ້ວ. ສິ່ງນີ້ສາມາດບັນລຸໄດ້ບໍ? ຈົ່ງປະຖິ້ມສິ່ງທີ່ບໍ່ດີ ທີ່ເກີດຂຶ້ນລະຫວ່າງພວກເຮົາເປັນສິ່ງໃນອະດີດ; ຈົ່ງໃຫ້ມີຄວາມຮັກລະຫວ່າງພວກເຮົາຕະຫຼອດໄປ. ເຮົາໄດ້ມອບຄວາມຮັກຢ່າງຫຼວງຫຼາຍໃຫ້ແກ່ມະນຸດ ແລະ ພວກເຂົາໄດ້ເສຍສະຫຼະຢ່າງມະຫາສານເພື່ອຮັກເຮົາ. ດ້ວຍເຫດນັ້ນ, ເຮົາຈຶ່ງຫວັງວ່າມວນມະນຸດຈະຖະໜອມຄວາມຮັກທີ່ບໍ່ເຈືອຈາງ ແລະ ບໍລິສຸດລະຫວ່າງພວກເຮົາ ເພື່ອວ່າ ຄວາມຮັກຂອງພວກເຮົາຈະແຜ່ຂະຫຍາຍໄປທົ່ວໂລກມະນຸດ ແລະ ຖືກສືບທອດຕະຫຼອດໄປ. ເມື່ອພວກເຮົາພົບກັນອີກ ຈົ່ງໃຫ້ພວກເຮົາຍັງເຊື່ອມໂຍງກັນໃນຄວາມຮັກ ເພື່ອວ່າ ຄວາມຮັກຂອງພວກເຮົາຈະໄດ້ສືບຕໍ່ໄປຊົ່ວນິລັນດອນ ແລະ ຖືກສັນລະເສີນ ແລະ ຖືກເລົ່າຂານກັນໂດຍຜູ້ຄົນທັງໝົດ. ສິ່ງນີ້ຈະເຮັດໃຫ້ເຮົາພໍໃຈ ແລະ ເຮົາຈະສະແດງໃບໜ້າທີ່ຍິ້ມແຍ້ມຂອງເຮົາຕໍ່ມວນມະນຸດ. ເຮົາຫວັງວ່າ ມະນຸດຈະຈື່ຄຳແນະນຳຂອງເຮົາ.

ວັນທີ 1 ມິຖຸນາ 1992

## ພາກພະໜວກ

# ການຕີຄວາມໝາຍຄວາມລຶກລັບແຫ່ງ “ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ”

# ບົດທີ 1

ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ "ບໍ່ມີຜູ້ໃດສາມາດເຂົ້າໃຈຮາກຖານຂອງພຣະທຳຂອງເຮົາ ແລະ ພວກເຂົາບໍ່ຮູ້ຈັກຈຸດປະສົງຂອງເຮົາໃນການກ່າວພຣະທຳເຫຼົ່ານັ້ນ", ຖ້າບໍ່ແມ່ນຍ້ອນການນໍາພາຂອງພຣະວິນຍານຂອງພຣະເຈົ້າ ແລະ ຖ້າບໍ່ແມ່ນຍ້ອນການມາເຖິງຂອງພຣະວັດຈະນະຂອງພຣະອົງ, ທຸກຄົນກໍຈະຖືກລົບລ້າງໄປພາຍໃຕ້ການຂ້ຽນຕີຂອງພຣະອົງ. ເປັນຫຍັງພຣະເຈົ້າຈຶ່ງໃຊ້ເວລາດົນເພື່ອທົດສອບທຸກຄົນ? ເປັນເວລາດົນເຖິງຫ້າເດືອນບໍ? ແນ່ນອນຢູ່ແລ້ວວ່ານີ້ແມ່ນຈຸດໃຈກາງຂອງການສົນທະນາຂອງພວກເຮົາ ພ້ອມກັບຈຸດສູນກາງໃນສະຕິປັນຍາຂອງພຣະເຈົ້າ. ພວກເຮົາອາດສົມມຸດຕິຖານໃນສິ່ງຕໍ່ໄປນີ້: ຖ້າການສ້າງຄຣິສຕະຈັກໄດ້ສືບຕໍ່ຈົນຮອດປັດຈຸບັນ ໂດຍບໍ່ມີຊ່ວງເວລາປັດຈຸບັນໃນການເອົາມະນຸດເຂົ້າສູ່ການທົດລອງ ແລະ ໂດຍບໍ່ມີການໂຈມຕີ, ການຂ້າ ແລະ ການຟັນຢ່າງຮຸນແຮງຂອງພຣະເຈົ້າໃສ່ເຜົ່າພັນມະນຸດທີ່ເສື່ອມຊາມ ແລ້ວຜົນທີ່ຈະໄດ້ຮັບແມ່ນຫຍັງ? ສະນັ້ນ, ພຣະເຈົ້າຈຶ່ງເຂົ້າສູ່ປະເດັນໃນປະໂຫຍກທຳອິດຢ່າງທັນທີ ໂດຍຊີ້ໃຫ້ເຫັນໂດຍກົງເຖິງຜົນທີ່ໄດ້ຮັບຈາກພາລະກິດທີ່ປະຕິບັດໃນຫຼາຍເດືອນຜ່ານມາ. ແທ້ຈິງແລ້ວ ພຣະອົງເຮັດໃຫ້ເລືອດແຕກອອກດ້ວຍການແທງຄັ້ງທຳອິດ. ນີ້ພຽງພໍທີ່ຈະສະແດງໃຫ້ເຫັນເຖິງສະຕິປັນຍາຂອງການກະທຳຂອງພຣະເຈົ້າໃນຊ່ວງໄລຍະຫຼາຍເດືອນນີ້: ສິ່ງເຫຼົ່ານັ້ນເຮັດໃຫ້ທຸກຄົນສາມາດຮຽນຮູ້ຜ່ານການທົດລອງກ່ຽວກັບວິທີອ່ອນນ້ອມ ແລະ ວິທີສະຫຼະຕົວເອງດ້ວຍຄວາມຈິງໃຈ ພ້ອມກັບວິທີຮູ້ຈັກພຣະເຈົ້າໃຫ້ດີຂຶ້ນຜ່ານການຫຼໍ່ຫຼອມທີ່ເຈັບປວດ. ຍິ່ງຜູ້ຄົນປະສົບກັບຄວາມໝົດຫວັງຫຼາຍສໍ່າໃດ ພວກເຂົາກໍຍິ່ງຮູ້ຈັກກັບຕົວເອງຫຼາຍສໍ່ານັ້ນ. ເວົ້າຕາມຄວາມຈິງແລ້ວ, ຍິ່ງພວກເຂົາພະເຊີນກັບການຫຼໍ່ຫຼອມທີ່ເຕັມໄປດ້ວຍການທົນທຸກ ພວກເຂົາກໍຍິ່ງມາຮູ້ຈັກຄວາມເສື່ອມຊາມຂອງຕົວເອງຫຼາຍສໍ່ານັ້ນ ຈົນເຖິງຈຸດທີ່ຮູ້ວ່າພວກເຂົາບໍ່ຄູ່ຄວນແມ່ນແຕ່ຈະເປັນຜູ້ເຮັດການບໍລິການໃຫ້ພຣະເຈົ້າ ແລະ ການໃຫ້ບໍລິການແມ່ນຖືກຍົກສູງໂດຍພຣະອົງ. ສະນັ້ນ, ຫຼັງຈາກທີ່ໄດ້ບັນລຸຜົນນີ້ແລ້ວ ເມື່ອມະນຸດໄດ້ໃຊ້ທຸກພາກສ່ວນຂອງຕົວເອງ ພຣະເຈົ້າຈຶ່ງອອກສຽງແຫ່ງຄວາມເມດຕາໂດຍກົງໂດຍບໍ່ໄດ້ມີການປິດບັງສິ່ງໃດ. ຫຼັງຈາກສອງສາມເດືອນເຫຼົ່ານີ້ແມ່ນສາມາດເຫັນໄດ້ທັນທີວ່າ ວິທີການປະຕິບັດພາລະກິດຂອງພຣະເຈົ້າ ໄດ້ເອົາມື້ນີ້ເປັນຈຸດເລີ່ມຕົ້ນຂອງມັນ; ພຣະອົງໄດ້ສ້າງແຜນນີ້ເພື່ອໃຫ້ທຸກຄົນໄດ້ເຫັນ. ຍ້ອນໃນອະດີດ ພຣະເຈົ້າກ່າວເປັນປະຈຳວ່າ "ມັນບໍ່ງ່າຍທີ່ຈະໄດ້ຮັບສິດໃນການຖືກຮຽກວ່າ ປະຊາຊົນຂອງພຣະເຈົ້າ" ພຣະອົງຈຶ່ງເຮັດໃຫ້ພຣະທຳເຫຼົ່ານີ້ເກີດຂຶ້ນໃນຜູ້ຄົນທີ່ຖືກເອີ້ນວ່າຜູ້ເຮັດການບໍລິການ ເຊິ່ງພຽງພໍທີ່ຈະສະແດງໃຫ້ເຫັນວ່າ ພຣະເຈົ້າແມ່ນໄວ້ໃຈໄດ້ໂດຍທີ່ບໍ່ຕ້ອງສົງໄສຫຍັງ. ສິ່ງໃດກໍຕາມທີ່ພຣະເຈົ້າກ່າວຈະກາຍເປັນຈິງໃນລະດັບທີ່ແຕກຕ່າງກັນ ແລະ ສິ່ງນັ້ນບໍ່ແມ່ນການກ່າວທີ່ວ່າງເປົ່າເລີຍ.

ເມື່ອທຸກຄົນເຕັມໄປດ້ວຍຄວາມເສົ້າ ແລະ ຄວາມເສຍໃຈຈົນເຖິງຈຸດທີ່ຂາດສະມາທິ, ພຣະທຳແບບນີ້ຈາກພຣະເຈົ້າກໍຈະຕີເຂົ້າເປົ້າໝາຍ ໂດຍເຮັດໃຫ້ພວກເຂົາທຸກຄົນຟື້ນຄືນໃນທ່າມກາງຄວາມໝົດຫວັງຂອງພວກເຂົາ. ເພື່ອກໍາຈັດຂໍ້ສົງໄສເພີ່ມເຕີມຈາກແນວຄິດຂອງມະນຸດ, ພຣະເຈົ້າຈຶ່ງໄດ້ເພີ່ມ

ສິ່ງຕໍ່ໄປນີ້: "ເຖິງແມ່ນພວກເຂົາຈະຖືກເອີ້ນວ່າປະຊາຊົນຂອງເຮົາ, ຕຳແໜ່ງນີ້ກໍບໍ່ໄດ້ເປັນຮອງການຖືກເອີ້ນວ່າ 'ບຸດຊາຍ' ຂອງເຮົາ". ສິ່ງນີ້ພຽງພໍທີ່ຈະສະແດງໃຫ້ເຫັນວ່າ ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດປົກປ້ອງສິດອຳນາດຂອງພຣະອົງເອງໄດ້ ແລະ ເມື່ອຜູ້ຄົນໄດ້ອ່ານສິ່ງນີ້ ພວກເຂົາກໍຈະເຊື່ອຢ່າງໜັກແໜ້ນຂຶ້ນກວ່າເກົ່າວ່າ ນີ້ແມ່ນຄວາມຈິງ ແທນທີ່ຈະແມ່ນວິທີການໃນການປະຕິບັດພາລະກິດ. ນອກເໜືອໄປກວ່ານັ້ນ, ເພື່ອວ່ານິມິດຂອງຜູ້ຄົນອາດຈະບໍ່ມືດມົວ ແລະ ຕົວຕົນຂອງທຸກຄົນກໍຈະຖືກເຮັດໃຫ້ຊັດເຈນຂຶ້ນໃນວິທີການໃໝ່ຂອງພຣະອົງ. ສິ່ງນີ້ແມ່ນພຽງພໍທີ່ຈະສະແດງເຖິງສະຕິປັນຍາຂອງພຣະເຈົ້າ ແລະ ສິ່ງນີ້ກໍເຮັດໃຫ້ຜູ້ຄົນສາມາດຮູ້ຈັກດີຂຶ້ນວ່າ ພຣະເຈົ້າສາມາດແນມເຫັນຈິດໃຈຂອງມະນຸດ; ໃນຄວາມຄິດ ແລະ ການປະຕິບັດຂອງພວກເຂົາ ມະນຸດແມ່ນຫຸ່ນຮັບໃຊ້ ໂດຍພຣະເຈົ້າເປັນຜູ້ດຶງເຊືອກ; ສິ່ງນີ້ແມ່ນສິ່ງທີ່ແນ່ນອນ ແລະ ນອກເໜືອຂໍ້ສົງໄສໃດໆ.

ກັບໄປຕອນເລີ່ມຕົ້ນ, ສິ່ງທີ່ພຣະເຈົ້າປະຕິບັດເລີ່ມແຕ່ຕອນທຳອິດແມ່ນເພື່ອຊີ້ໃຫ້ເຫັນໂດຍກົງວ່າ ຂັ້ນຕອນທຳອິດຂອງພາລະກິດຂອງພຣະອົງໃນການ "ເຮັດໃຫ້ຄຣິສຕະຈັກບໍລິສຸດ" ແມ່ນໄດ້ສິ້ນສຸດລົງແລ້ວ. "ສະຖານະການໃນປັດຈຸບັນບໍ່ຄືແຕ່ກ່ອນ ແລະ ພາລະກິດຂອງເຮົາໄດ້ເຂົ້າສູ່ຈຸດເລີ່ມຕົ້ນໃໝ່ແລ້ວ". ຈາກຖ້ອຍຄຳນີ້, ຄົນເຮົາສາມາດເຫັນໄດ້ວ່າ ພາລະກິດຂອງພຣະເຈົ້າໄດ້ເຂົ້າສູ່ຈຸດເລີ່ມຕົ້ນໃໝ່ແລ້ວ ເຊິ່ງພຣະອົງໄດ້ຊີ້ໃຫ້ພວກເຮົາເຫັນແຜນຜັງສຳລັບຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງຢ່າງທັນທີ. ຫຼັງຈາກການສ້າງຄຣິສຕະຈັກສິ້ນສຸດລົງ, ຊີວິດໃນຍຸກແຫ່ງອານາຈັກກໍຈະເລີ່ມຂຶ້ນ "ເນື່ອງຈາກວ່າບັດນີ້ບໍ່ແມ່ນຍຸກແຫ່ງການສ້າງຄຣິສຕະຈັກອີກຕໍ່ໄປ ແຕ່ກົງກັນຂ້າມ ແມ່ນຍຸກທີ່ອານາຈັກຖືກສ້າງຈົນສຳເລັດແລ້ວ". ຍິ່ງໄປກວ່ານັ້ນ, ພຣະອົງໄດ້ກ່າວວ່າ ໃນຂະນະທີ່ຜູ້ຄົນຍັງຄົງຢູ່ແຜ່ນດິນໂລກ ການເຕົ້າໂຮມຂອງພວກເຂົາກໍຈະສືບຕໍ່ຖືກເອີ້ນວ່າ ຄຣິສຕະຈັກ ເຊິ່ງດ້ວຍວິທີນີ້ ກໍຈະເປັນການຫຼີກເວັ້ນການເຂົ້າໃຈວ່າ "ອານາຈັກ" ບໍ່ມີແທ້ຈິງຕາມທີ່ທຸກຄົນໄດ້ຈິນຕະນາການໄວ້. ຕໍ່ໄປແມ່ນການສົນທະນາກ່ຽວກັບເລື່ອງນິມິດ.

ເຖິງວ່າຕອນນີ້ແມ່ນຍຸກແຫ່ງການສ້າງອານາຈັກ ແລະ ການສິ້ນສຸດຂອງການສ້າງຄຣິສຕະຈັກ ແຕ່ເປັນຫຍັງການເຕົ້າໂຮມທັງໝົດຍັງຖືກເອີ້ນວ່າ ຄຣິສຕະຈັກ? ໄດ້ມີການກ່າວໃນອະດີດວ່າ ຄຣິສຕະຈັກແມ່ນສິ່ງທີ່ມາກ່ອນອານາຈັກ ແລະ ຖ້າບໍ່ມີຄຣິສຕະຈັກກໍຈະບໍ່ສາມາດມີການກ່າວເຖິງອານາຈັກ. ການເລີ່ມຕົ້ນຂອງຍຸກແຫ່ງອານາຈັກແມ່ນການເລີ່ມຕົ້ນພັນທະກິດຂອງພຣະເຈົ້າໃນເນື້ອໜັງ ແລະ ຍຸກແຫ່ງອານາຈັກແມ່ນຖືກນຳເຂົ້າມາໂດຍພຣະເຈົ້າທີ່ບັງເກີດເປັນມະນຸດ. ສິ່ງທີ່ພຣະອົງນຳມາແມ່ນຍຸກແຫ່ງອານາຈັກ ແລະ ບໍ່ແມ່ນການລົງມາຢ່າງເປັນທາງການຂອງອານາຈັກ. ມັນບໍ່ຍາກທີ່ຈະຈິນຕະນາການເຖິງສິ່ງນີ້; ຄວາມໝາຍຂອງເຮົາໃນຄຳເວົ້າທີ່ວ່າ ປະຊາຊົນຂອງພຣະເຈົ້າ ແມ່ນ ປະຊາຊົນຂອງຍຸກແຫ່ງອານາຈັກ ແລະ ບໍ່ແມ່ນປະຊາຊົນຂອງອານາຈັກເອງ. ດ້ວຍເຫດນັ້ນ ມັນຈຶ່ງສົມເຫດສົມຜົນໃນການກ່າວວ່າ ການເຕົ້າໂຮມຢູ່ແຜ່ນດິນໂລກຍັງຄວນຖືກເອີ້ນວ່າ ຄຣິສຕະຈັກ. ໃນອະດີດພຣະອົງປະຕິບັດພາຍໃນຄວາມເປັນມະນຸດປົກກະຕິຂອງພຣະອົງ ໃນຂະນະທີ່ຍັງບໍ່ໄດ້ເປັນພະຍານໃນຖານະພຣະເຈົ້າເທື່ອ ແລະ ດ້ວຍເຫດນັ້ນ ຍຸກແຫ່ງອານາຈັກຈຶ່ງບໍ່ໄດ້ເລີ່ມຂຶ້ນໃນທ່າມກາງມະນຸດ;

ດັ່ງທີ່ເຮົາໄດ້ກ່າວໄວ້ ພຣະວິນຍານຂອງເຮົາຍັງບໍ່ໄດ້ເລີ່ມພາລະກິດຢ່າງເປັນທາງການໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາເທື່ອ. ແຕ່ຕອນນີ້ ພຣະເຈົ້າເອງໄດ້ກາຍເປັນພະຍານ ແລະ ອານາຈັກກໍເກີດເປັນຈິງຂຶ້ນໃນທ່າມກາງມະນຸດ. ສິ່ງນີ້ໝາຍຄວາມວ່າ ເຮົາຈະເລີ່ມປະຕິບັດພາລະກິດພາຍໃນຄວາມເປັນພຣະເຈົ້າຂອງເຮົາ ແລະ ດ້ວຍເຫດນັ້ນ ມະນຸດເຫຼົ່ານັ້ນທີ່ສາມາດຮູ້ຄຸນຄ່າຂອງພຣະທຳທີ່ເຮົາກ່າວ ແລະ ການກະທຳທີ່ເຮົາປະຕິບັດໃນຄວາມເປັນພຣະເຈົ້າຂອງເຮົາກໍຈະຖືກຮຽກວ່າ ປະຊາຊົນຂອງເຮົາໃນຍຸກແຫ່ງອານາຈັກ. ມັນແມ່ນຈາກສິ່ງນີ້ທີ່ "ປະຊາຊົນຂອງພຣະເຈົ້າ" ປາກົດຂຶ້ນ. ໃນຂັ້ນຕອນນີ້, ຫຼັກໆແລ້ວແມ່ນຄວາມເປັນພຣະເຈົ້າຂອງເຮົາທີ່ປະຕິບັດ ແລະ ກ່າວ. ມະນຸດແມ່ນບໍ່ສາມາດແຊກແຊງໄດ້ ແລະ ເຂົາບໍ່ສາມາດລົບກວນແຜນການຂອງເຮົາ. ເມື່ອພຣະເຈົ້າໄດ້ຮອດຂັ້ນຕອນໃດໜຶ່ງໃນການກ່າວຂອງພຣະອົງ, ກໍຈະມີການເປັນພະຍານຕໍ່ຊື່ຂອງພຣະອົງ ແລະ ຈາກຈຸດນີ້ ການທົດລອງມະນຸດຂອງພຣະອົງກໍຈະເລີ່ມຂຶ້ນ. ນີ້ແມ່ນຈຸດສູງສຸດຂອງສະຕິປັນຍາໃນພາລະກິດຂອງພຣະເຈົ້າ. ມັນວາງພື້ນຖານທີ່ໝັ້ນຄົງ ແລະ ວາງຮາກຖານລົງສຳລັບການເລີ່ມຕົ້ນຂັ້ນຕອນຕໍ່ໄປ ພ້ອມກັບການສິ້ນສຸດຂອງຂັ້ນຕອນຜ່ານມາ. ນີ້ແມ່ນສິ່ງທີ່ບໍ່ມີຜູ້ໃດຈະສາມາດຄາດການລ່ວງໜ້າໄດ້ໃນຖານະມະນຸດ; ມັນແມ່ນຈຸດພົບປະຂອງພາກສ່ວນທຳອິດ ແລະ ທີສອງຂອງຍຸກແຫ່ງການພິພາກສາ. ຖ້າບໍ່ມີສອງສາມເດືອນເຫຼົ່ານັ້ນ ເຊິ່ງເຮົາໄດ້ຫຼໍ່ຫຼອມມະນຸດ, ຄວາມເປັນພຣະເຈົ້າຂອງເຮົາກໍຈະບໍ່ມີທາງປະຕິບັດພາລະກິດ. ຫຼາຍເດືອນເຫຼົ່ານັ້ນຂອງການຫຼໍ່ຫຼອມແມ່ນໄດ້ເປີດທາງສຳລັບຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ. ການຢຸດຕິພາລະກິດໃນສອງສາມເດືອນເຫຼົ່ານີ້ແມ່ນສັນຍານບອກວ່າ ໄລຍະຕໍ່ໄປຂອງພາລະກິດແມ່ນຈະເລິກເຊິ່ງຂຶ້ນກວ່າເກົ່າ. ຖ້າຄົນໃດໜຶ່ງເຂົ້າໃຈພຣະທຳຂອງພຣະເຈົ້າຢ່າງແທ້ຈິງ, ຄົນນັ້ນກໍອາດຈະສາມາດເຂົ້າໃຈວ່າ ພຣະອົງກຳລັງໃຊ້ໄລຍະຫຼາຍເດືອນນີ້ ເພື່ອເລີ່ມຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງ ເຊິ່ງດ້ວຍເຫດນັ້ນ ກໍຈະເຮັດໃຫ້ພາລະກິດບັນລຸຜົນໄດ້ດີຂຶ້ນ. ຍ້ອນສິ່ງກີດຂວາງຂອງຄວາມເປັນມະນຸດຂອງເຮົາ ໄດ້ສ້າງອຸປະສັກຕໍ່ຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ, ສະນັ້ນ ທັງສອງຝ່າຍຈຶ່ງຖືກກະຕຸ້ນ ແລະ ໄດ້ຮັບປະໂຫຍດທີ່ສຳຄັນຕະຫຼອດສອງສາມເດືອນເຫຼົ່ານີ້ຂອງການຖືກຫຼໍ່ຫຼອມຜ່ານການທົນທຸກ. ດ້ວຍເຫດຜົນນີ້ ຕອນນີ້ມະນຸດຈຶ່ງເລີ່ມເຫັນຄຸນຄ່າໃນວິທີການທີ່ເຮົາຮຽກເອີ້ນເຂົາ. ສະນັ້ນ, ເມື່ອພຣະເຈົ້າ ໝຸນປາກາຂອງພຣະອົງ ແລະ ກ່າວວ່າ ພຣະອົງຈະບໍ່ຮຽກມະນຸດວ່າ "ຜູ້ເຮັດການບໍລິການ" ອີກຕໍ່ໄປ ແຕ່ກົງກັນຂ້າມຈະຮຽກວ່າ "ປະຊາຊົນຂອງພຣະເຈົ້າ", ພວກເຂົາທຸກຄົນກໍເຕັມໄປດ້ວຍຄວາມສຸກ. ນີ້ແມ່ນຈຸດອ່ອນຂອງມະນຸດ. ແນ່ນອນຢູ່ແລ້ວວ່າ ພຣະເຈົ້າໄດ້ກ່າວດັ່ງນັ້ນກໍເພື່ອຈັບເອົາຈຸດອ່ອນທີ່ສຳຄັນນີ້ຂອງມະນຸດ.

ເພື່ອເອົາຊະນະທຸກຄົນຕື່ມອີກ ແລະ ເພື່ອໄດ້ຮັບຄວາມເຊື່ອຢ່າງຈິງໃຈຈາກພວກເຂົາ ແລະ ເພື່ອຊີ້ໃຫ້ເຫັນເຖິງຄວາມຈິງວ່າ ການອຸທິດຕົນຂອງບາງຄົນແມ່ນເຈືອປົນດ້ວຍຄວາມບໍ່ບໍລິສຸດ, ພຣະເຈົ້າໄດ້ດຳເນີນຂັ້ນຕອນເພີ່ມເຕີມໃນການຮຽກຄວາມສົນໃຈຕໍ່ຄວາມຂີ້ຮ້າຍທັງໝົດທີ່ຫຼາກຫຼາຍປະເພດຂອງມະນຸດ ແລະ ໃນການເຮັດສິ່ງດັ່ງກ່າວ ພຣະອົງກໍໄດ້ບັນລຸພຣະທຳຂອງພຣະອົງທີ່ວ່າ: "ມີຈັກຄົນທີ່ຈິງໃຈໃນການຮັກເຮົາ? ມີຜູ້ໃດແດ່ທີ່ບໍ່ໄດ້ປະຕິບັດໂດຍຄຳນຶງເຖິງອະນາຄົດຂອງພວກເຂົາເອງ?

ມີຜູ້ໃດແດ່ທີ່ບໍ່ເຄີຍຈົ່ມວ່າໃນຊ່ວງການທົດລອງຂອງພວກເຂົາ?" ຈາກພຣະທຳເຫຼົ່ານີ້, ທຸກຄົນແມ່ນສາມາດຮູ້ເຖິງຄວາມບໍ່ເຊື່ອຟັງ, ຄວາມບໍ່ຈິງຮັກພັກດີ ແລະ ຂາດການອຸທິດຕົນຕໍ່ຄອບຄົວຂອງພວກເຂົາເອງ ແລະ ດ້ວຍເຫດນັ້ນ ກໍຈຶ່ງເຫັນວ່າ ຄວາມເມດຕາ ແລະ ຄວາມກະລຸນາຂອງພຣະເຈົ້າແມ່ນຕິດຕາມທຸກຄົນທີ່ສະແຫວງຫາພຣະອົງທຸກບາດກ້າວ. ສາມາດເຫັນສິ່ງນີ້ຈາກພຣະທຳຕໍ່ໄປນີ້ທີ່ວ່າ: "ໃນເວລາທີ່ບາງຄົນໃກ້ຈະຖອຍກັບ, ໃນເວລາທີ່ທຸກຄົນ ທີ່ຫວັງໃຫ້ເຮົາປ່ຽນວິທີການກ່າວຂອງເຮົາ ໄດ້ສູນເສຍຄວາມຫວັງ, ໃນເວລານັ້ນ ເຮົາກໍຈະມອບສຽງແຫ່ງຄວາມລອດພົ້ນ ໂດຍນຳເອົາທຸກຄົນທີ່ຮັກເຮົາດ້ວຍຄວາມຈິງໃຈກັບຄືນມາສູ່ອານາຈັກຂອງເຮົາ ແລະ ຢູ່ຕໍ່ໜ້າບັນລັງຂອງເຮົາ". ໃນນີ້ ວະລີທີ່ວ່າ "ຜູ້ທີ່ຮັກເຮົາດ້ວຍຄວາມຈິງໃຈ" ແລະ ຄຳຖາມທີ່ເລິກເຊິ່ງທີ່ວ່າ "ມີຈັກຄົນທີ່ຮັກເຮົາດ້ວຍຄວາມຈິງໃຈ?" ແມ່ນບໍ່ໄດ້ຂັດກັນເອງ. ສິ່ງເຫຼົ່ານັ້ນສະແດງໃຫ້ເຫັນວ່າ "ຄວາມຈິງໃຈ" ໃນບໍລິບົດນີ້ມີຄວາມບໍ່ບໍລິສຸດ. ບໍ່ແມ່ນວ່າ ພຣະເຈົ້າບໍ່ຮູ້ຈັກຫຍັງ; ກົງກັນຂ້າມ, ແນ່ນອນຢູ່ແລ້ວວ່າ ຍ້ອນພຣະເຈົ້າສາມາດເຫັນສ່ວນເລິກສຸດຂອງຫົວໃຈຂອງມະນຸດ ພຣະອົງຈຶ່ງໃຊ້ພຣະທຳເຊັ່ນ "ຄວາມຈິງໃຈ" ເຊິ່ງເປັນການເວົ້າສຽດສີ ທີ່ແນໃສ່ເຜົ່າພັນມະນຸດທີ່ເສື່ອມຊາມ ເພື່ອເຮັດໃຫ້ທຸກຄົນຮູ້ສຶກເຖິງຄວາມເປັນໜີ້ບຸນຄຸນຕໍ່ພຣະເຈົ້າຫຼາຍຂຶ້ນ ແລະ ຕຳນິຕົວເອງຢ່າງຮ້າຍແຮງຫຼາຍຂຶ້ນ ພ້ອມກັບຮູ້ຄວາມຈິງທີ່ວ່າ ຄວາມເສົ້າໃນໃຈຂອງພວກເຂົາແມ່ນມາຈາກຊາຕານທັງໝົດ. ທຸກຄົນແປກໃຈເມື່ອພວກເຂົາເຫັນຄຳສັບເຊັ່ນ: "ການອຸທິດຕົນ" ໂດຍຄິດຢູ່ໃນໃຈວ່າ: "ຂ້ານ້ອຍໄດ້ດ່າສະຫວັນ ແລະ ແຜ່ນດິນໂລກຫຼາຍຄັ້ງ ແລະ ຕ້ອງການຈາກໄປຫຼາຍຄັ້ງ ແຕ່ຍ້ອນຂ້ານ້ອຍຢ້ານກົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າ ຂ້ານ້ອຍຈຶ່ງຈະຈັດການກັບບັນຫາຕ່າງໆດ້ວຍທຸກວິທີທາງ ພຽງແຕ່ເພື່ອຈະໃຫ້ມັນແລ້ວໆໄປ ແລະ ເຮັດຕາມທີ່ທຸກຄົນເຮັດ ໂດຍລໍຖ້າໃຫ້ພຣະເຈົ້າຈັດການກັບຂ້ານ້ອຍ ແລະ ຄິດວ່າ ຖ້າບໍ່ມີຫວັງກັບສິ່ງຕ່າງໆຢ່າງແທ້ຈິງ ກໍຈະຍັງພໍມີເວລາສຳລັບຂ້ານ້ອຍໃຫ້ຖອຍຫຼັງກັບຢ່າງຊ້າໆ. ແຕ່ຕອນນີ້ພຣະເຈົ້າກຳລັງເອີ້ນຫາພວກຂ້ານ້ອຍທີ່ເປັນປະຊາຊົນທີ່ອຸທິດຕົນຂອງພຣະອົງ. ພຣະເຈົ້າສາມາດເປັນພຣະເຈົ້າທີ່ເຫັນສ່ວນເລິກສຸດຂອງຫົວໃຈຂອງມະນຸດແທ້ບໍ?" ເພື່ອຫຼີກເວັ້ນການເຂົ້າໃຈຜິດແບບນີ້ ພຣະເຈົ້າຈຶ່ງໄດ້ຮຽກຄວາມສົນໃຈຕໍ່ສະພາບທາງຈິດຂອງປະຊາຊົນປະເພດຕ່າງໆໃນຕອນສຸດທ້າຍເທົ່ານັ້ນ ເຊິ່ງເຮັດໃຫ້ທຸກຄົນປ່ຽນຈາກສະພາບທີ່ພວກເຂົາມີຄວາມສົງໄສຢູ່ພາຍໃນ ໃນຂະນະທີ່ພາຍນອກແມ່ນສະແດງເຖິງຄວາມດີໃຈ ເພື່ອໃຫ້ກາຍເປັນສະພາບທີ່ພວກເຂົາເຊື່ອດ້ວຍໃຈ, ດ້ວຍຄຳເວົ້າ ແລະ ດ້ວຍສາຍຕາ. ດ້ວຍວິທີນີ້, ຄວາມປະທັບໃຈຂອງມະນຸດທີ່ມີຕໍ່ພຣະທຳຂອງພຣະເຈົ້າຈຶ່ງມີຄວາມເລິກເຊິ່ງ, ດ້ວຍເຫດຜົນນີ້ ມະນຸດຈຶ່ງໄດ້ມີຄວາມຢ້ານກົວຫຼາຍຂຶ້ນ, ມີຄວາມເຄົາລົບຫຼາຍຂຶ້ນ ແລະ ຍິ່ງໄປກວ່ານັ້ນ ກໍໄດ້ຮັບຄວາມເຂົ້າໃຈກ່ຽວກັບພຣະເຈົ້າຫຼາຍຂຶ້ນ. ໃນທີ່ສຸດແລ້ວ, ເພື່ອຜ່ອນຄວາມເປັນຫ່ວງຂອງມະນຸດ ພຣະເຈົ້າຈຶ່ງໄດ້ກ່າວວ່າ: "ແຕ່ວ່າ ອະດີດກໍຄືອະດີດ ແລະ ປັດຈຸບັນກໍໄດ້ມາຮອດແລ້ວ ຈຶ່ງບໍ່ຈຳເປັນຕ້ອງປາຖະໜາເຖິງອະດີດຄວາມຫຼັງອີກຕໍ່ໄປ ຫຼື ມີຄວາມຄິດກ່ຽວກັບອະນາຄົດ". ວິທີການກ່າວທີ່ເຄັ່ງຕຶງ, ນິ້ມນວນ ແຕ່ມີລັກສະນະແຫຼມຄົມປະເພດນີ້ແມ່ນມີຜົນທີ່ດີຫຼາຍ ເຊິ່ງເຮັດໃຫ້ທຸກຄົນທີ່ອ່ານພຣະທຳຂອງພຣະອົງເຫັນແສງສະຫວ່າງອີກຄັ້ງຈາກທ່າມກາງຄວາມໝົດຫວັງໃນອະດີດ

ຈົນພວກເຂົາຈະເຫັນສະຕິປັນຍາ ແລະ ການກະທຳຂອງພຣະເຈົ້າ, ໄດ້ຮັບຍົດເປັນ "ປະຊາຊົນຂອງພຣະເຈົ້າ", ກຳຈັດກ້ອນເມກແຫ່ງຄວາມສົງໄສອອກຈາກໃຈຂອງພວກເຂົາ ແລະ ຫຼັງຈາກນັ້ນ ກໍມາຮູ້ຈັກຕົວເອງຈາກແບບແຜນທີ່ມີການເຄື່ອນຍ້າຍຂອງສະພາບທາງຈິດຂອງພວກເຂົາ. ສະພາບການເຫຼົ່ານີ້ຫຼຸດລົງ ແລະ ໄຫຼຕາມລຳດັບ ໂດຍເຮັດໃຫ້ມີຄວາມເສຍໃຈ ແລະ ຄວາມເສົ້າ, ຄວາມດີໃຈ ແລະ ຄວາມສຸກ. ໃນບົດນີ້ ພຣະເຈົ້າໄດ້ອະທິບາຍຫຍໍ້ໆກ່ຽວກັບຜູ້ຄົນ ເຊິ່ງມີລາຍລະອຽດຄ້າຍຄືຊີວິດຈິງ ແລະ ມີຊີວິດຊີວາ ຈົນເຖິງຈຸດຂອງຄວາມສົມບູນ. ມັນແມ່ນສິ່ງທີ່ມະນຸດບໍ່ສາມາດບັນລຸໄດ້ຢ່າງແທ້ຈິງ, ເປັນສິ່ງທີ່ເປີດໂປງຄວາມລັບໃນບ່ອນລັບສຸດໃນໃຈຂອງມະນຸດຢ່າງແທ້ຈິງ. ສິ່ງນີ້ສາມາດເປັນສິ່ງທີ່ມະນຸດມີຄວາມສາມາດເຮັດໄດ້ບໍ?

ສິ່ງທີ່ຕາມຫຼັງສິ່ງນີ້ທັນທີ ແລະ ຍິ່ງມີຄວາມສຳຄັນຫຼາຍແມ່ນຂໍ້ຄວາມຂ້າງລຸ່ມນີ້ ເຊິ່ງເປີດເຜີຍບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າໂດຍກົງໃຫ້ແກ່ມະນຸດ ແລະ ຍິ່ງໄປກວ່ານັ້ນ ກໍແມ່ນພາກສ່ວນທີ່ສຳຄັນທີ່ສຸດ: "ໃນການເປັນມະນຸດ, ຜູ້ໃດກໍຕາມທີ່ຕໍ່ຕ້ານຄວາມເປັນຈິງ ແລະ ບໍ່ປະຕິບັດສິ່ງຕ່າງໆຕາມການນຳພາຂອງເຮົາແມ່ນຈະບໍ່ມີຈຸດຈົບທີ່ດີ ມີແຕ່ຈະນຳເອົາຄວາມເດືອດຮ້ອນມາສູ່ພວກເຂົາເອງເທົ່ານັ້ນ. ຈາກທຸກສິ່ງທີ່ເກີດຂຶ້ນໃນຈັກກະວານ ແມ່ນບໍ່ມີສິ່ງໃດທີ່ຈະບໍ່ມີຄຳຕັດສິນສຸດທ້າຍຂອງເຮົາ". ນີ້ບໍ່ແມ່ນບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າບໍ? ສິ່ງນີ້ພຽງພໍທີ່ຈະສະແດງໃຫ້ເຫັນວ່າຕົວຢ່າງຂອງຜູ້ຄົນເຫຼົ່ານັ້ນທີ່ຝ່າຝືນບົດບັນຍັດແຫ່ງການບໍລິຫານນີ້ແມ່ນມີຈຳນວນຫຼວງຫຼາຍ. ອີງຕາມຂ້າງເທິງ, ພຣະເຈົ້າດຳເນີນຕໍ່ໄປເພື່ອແນະນຳບໍ່ໃຫ້ທຸກຄົນຄິດກ່ຽວກັບຊະຕາກຳຂອງພວກເຂົາເອງ. ຖ້າຄົນໃດໜຶ່ງກ້າທີ່ຈະປາຖະໜາເປັນອິດສະຫຼະຈາກການປັ້ນແຕ່ງຂອງພຣະເຈົ້າ, ຜົນທີ່ຕາມມາກໍຈະຮ້າຍແຮງເກີນທີ່ຈະຈິນຕະນາການໄດ້. ສິ່ງນີ້ຈະເຮັດໃຫ້ທຸກຄົນເຫຼົ່ານັ້ນ ທີ່ປະສົບກັບແສງສະຫວ່າງ ແລະ ແສງເຍືອງທາງໃນພຣະທຳເຫຼົ່ານີ້ເຂົ້າໃຈບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າດີຂຶ້ນ ພ້ອມກັບເຮັດໃຫ້ເຂົ້າໃຈວ່າ ຄວາມສະຫງ່າຜ່າເຜີຍຂອງພຣະອົງແມ່ນບໍ່ສາມາດຖືກລ່ວງເກີນໄດ້ ແລະ ດ້ວຍເຫດນັ້ນ ກໍມີປະສົບການ ແລະ ໝັ້ນຄົງຫຼາຍຂຶ້ນ ໂດຍມີຄວາມຂຽວດັ່ງຕົ້ນແປກທີ່ທົນທານຕໍ່ລົມ ແລະ ນໍ້າກ້າມ, ຢືນຕັ້ງໝັ້ນຕໍ່ຕ້ານການຄຸກຄາມຂອງຄວາມໜາວຈັດ ແລະ ສືບຕໍ່ເພີ່ມພະລັງຊີວິດສີຂຽວທີ່ຈະເລີນເຕີບໃຫຍ່ຂອງທຳມະຊາດ. ຜູ້ຄົນສ່ວນໃຫຍ່ທີ່ພົບກັບຂໍ້ຄວາມນີ້ແມ່ນຮູ້ສຶກງົງ ຄືກັບວ່າ ພວກເຂົາໄດ້ຍ່າງໄປມາໃນເຂົາວົງກົດປະເພດໜຶ່ງ; ນີ້ກໍຍ້ອນວ່າ ເນື້ອຫາຂອງພຣະທຳຂອງພຣະເຈົ້າປ່ຽນແປງຂ້ອນຂ້າງໄວ ແລະ ດ້ວຍເຫດນັ້ນ ຄົນເກົ້າຄົນຈາກຈຳນວນສິບຄົນຈຶ່ງເຂົ້າໄປໃນເຂົາວົງກົດເມື່ອພວກເຂົາພະຍາຍາມເຂົ້າໃຈອຸປະນິໄສທີ່ເສື່ອມຊາມຂອງພວກເຂົາເອງ. ເພື່ອວ່າພາລະກິດອາດຈະລາບລື້ນຂຶ້ນໃນອະນາຄົດ, ເພື່ອວ່າຄວາມສົງໄສໃນຫົວໃຈຂອງມະນຸດທຸກຄົນອາດຈະຖືກກຳຈັດ ແລະ ເພື່ອວ່າທຸກຄົນອາດຈະກ້າວໄປທາງໜ້າໜຶ່ງກ້າວໃນຄວາມເຊື່ອຂອງພວກເຂົາໃນຄວາມຊື່ສັດຂອງພຣະເຈົ້າ, ພຣະອົງຈຶ່ງເໜັ້ນໜັກໃນວັກສຸດທ້າຍຂອງຂໍ້ຄວາມນັ້ນວ່າ: "ທຸກຄົນທີ່ຮັກເຮົາດ້ວຍຄວາມຈິງໃຈຈະກັບຄືນມາຢູ່ຕໍ່ໜ້າບັນລັງຂອງເຮົາຢ່າງແນ່ນອນ". ສະນັ້ນ, ຈິດໃຈຂອງຜູ້ຄົນ ທີ່ປະສົບກັບພາລະກິດຂອງພຣະອົງເປັນເວລາຫຼາຍເດືອນແມ່ນໄດ້ຮັບການແບ່ງເບົາບາງສ່ວນຈາກຄວາມກັງວົນ

ໃຈຂອງພວກເຂົາທັນທີ. ຍິ່ງໄປກວ່ານັ້ນ, ຫົວໃຈຂອງພວກເຂົາ ທີ່ຖືກຍຸດໄວ້ຊົ່ວຄາວກາງອາກາດ ກໍໄດ້ກັບໄປເປັນສິ່ງທີ່ພວກມັນເຄີຍເປັນ ຄືກັບວ່າ ກ້ອນຫີນໜັກໄດ້ຕົກລົງສູ່ພື້ນດິນ. ພວກເຂົາບໍ່ຕ້ອງຄິດເຖິງໂຊກຊະຕາຂອງພວກເຂົາອີກຕໍ່ໄປ; ນອກຈາກນັ້ນ, ພວກເຂົາເຊື່ອວ່າ ພຣະເຈົ້າຈະບໍ່ກ່າວພຣະທຳທີ່ວ່າງເປົ່າອີກຕໍ່ໄປ. ຍ້ອນມະນຸດຄິດວ່າຕົວເອງຊອບທຳ ຈຶ່ງບໍ່ມີແມ່ນແຕ່ຄົນດຽວທີ່ບໍ່ໄດ້ເຊື່ອວ່າ ພວກເຂົາສະແດງການອຸທິດຕົນຫຼາຍທີ່ສຸດຕໍ່ພຣະເຈົ້າ; ນີ້ຄືເຫດຜົນທີ່ພຣະເຈົ້າເຈດຕະນາເໜັ້ນໜັກໃສ່ "ຄວາມຈິງໃຈ" ເພື່ອບັນລຸຜົນທີ່ດີກວ່າ. ນີ້ກໍເພື່ອປູທາງ ແລະ ວາງພື້ນຖານສຳລັບຂັ້ນຕອນຕໍ່ໄປໃນພາລະກິດຂອງພຣະອົງ.

# ບົດທີ 3

ປັດຈຸບັນບໍ່ແມ່ນຍຸກແຫ່ງພຣະຄຸນ ຫຼື ຍຸກແຫ່ງຄວາມເມດຕາ ແຕ່ແມ່ນຍຸກແຫ່ງອານາຈັກ ທີ່ປະຊາຊົນຂອງພຣະເຈົ້າຖືກເປີດເຜີຍ, ເປັນຍຸກທີ່ພຣະເຈົ້າເຮັດສິ່ງຕ່າງໆຜ່ານຄວາມເປັນພຣະເຈົ້າໂດຍກົງ. ດັ່ງນັ້ນ, ໃນບົດນີ້ ທີ່ກ່ຽວກັບພຣະທຳຂອງພຣະເຈົ້າ, ພຣະເຈົ້າແມ່ນນຳພາທຸກຄົນທີ່ຍອມຮັບພຣະທຳຂອງພຣະອົງໃນໂລກແຫ່ງວິນຍານ. ໃນວັກຕົ້ນ, ພຣະອົງໄດ້ກະກຽມສິ່ງເຫຼົ່ານີ້ໄວ້ແລ້ວລ່ວງໜ້າ ແລະ ຖ້າຄົນເຮົາມີຄວາມຮູ້ກ່ຽວກັບພຣະທຳຂອງພຣະເຈົ້າ, ພວກເຂົາກໍຈະນຳຕາມເຄືອໄມ້ເພື່ອເອົາໝາກ ແລະ ຈະເຂົ້າໃຈເຖິງສິ່ງທີ່ພຣະເຈົ້າປາດຖະໜາທີ່ຈະບັນລຸໃນປະຊາຊົນຂອງພຣະອົງໂດຍກົງ. ໃນແຕ່ກ່ອນ, ຜູ້ຄົນຖືກທົດສອບຜ່ານຕຳແໜ່ງ "ຜູ້ເຮັດການບໍລິການ" ແລະ ໃນປັດຈຸບັນ ພາຍຫຼັງທີ່ພວກເຂົາໄດ້ຮັບການທົດສອບ ການເຝິກອົບຮົມຂອງພວກເຂົາກໍໄດ້ເລີ່ມຂຶ້ນຢ່າງເປັນທາງການ. ນອກຈາກນັ້ນ, ຜູ້ຄົນຕ້ອງມີຄວາມຮູ້ຫຼາຍຂຶ້ນກ່ຽວກັບພາລະກິດຂອງພຣະເຈົ້າ ໂດຍອີງໃສ່ພື້ນຖານຂອງພຣະທຳໃນອະດີດ ແລະ ຕ້ອງເບິ່ງພຣະທຳ ແລະ ບຸກຄົນ ແລະ ພຣະວິນຍານ ແລະ ບຸກຄົນວ່າເປັນສິ່ງທີ່ແຍກອອກຈາກກັນບໍ່ໄດ້ ໂດຍຖືວ່າ ເປັນປາກດຽວ, ຫົວໃຈດຽວ, ການກະທຳດຽວ ແລະ ແຫຼ່ງທີ່ມາດຽວກັນ. ເງື່ອນໄຂເຫຼົ່ານີ້ແມ່ນເງື່ອນໄຂສູງສຸດທີ່ພຣະເຈົ້າໄດ້ສ້າງຂຶ້ນໃຫ້ແກ່ມະນຸດນັບແຕ່ການຊົງສ້າງ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ພຣະເຈົ້າປາດຖະໜາທີ່ຈະໃຊ້ສ່ວນໜຶ່ງຂອງຄວາມພະຍາຍາມຂອງພຣະອົງເພື່ອປະຊາຊົນຂອງພຣະອົງ, ພຣະອົງປາດຖະໜາສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນໃນຕົວຂອງພວກເຂົາ ແລະ ທີ່ສຳຄັນໄປກວ່ານັ້ນກໍຄື ພຣະອົງປາດຖະໜາທີ່ຈະເຮັດໃຫ້ທຸກຄົນເຊື່ອຟັງພາລະກິດ ແລະ ພຣະທຳທັງໝົດຂອງພຣະເຈົ້າ. ໃນດ້ານໜຶ່ງ, ພຣະເຈົ້າເອງແມ່ນຍຶດໝັ້ນຕໍ່ການເປັນພະຍານຂອງພຣະອົງ ແລະ ໃນອີກດ້ານ ພຣະອົງກໍສ້າງເງື່ອນໄຂຂອງປະຊາຊົນຂອງພຣະອົງ ແລະ ໄດ້ອອກພຣະດຳລັດຂອງພຣະເຈົ້າໂດຍກົງໃຫ້ແກ່ມວນຊົນ: ສະນັ້ນ, ເນື່ອງຈາກພວກເຈົ້າຖືກເອີ້ນວ່າປະຊາຊົນຂອງເຮົາ, ສິ່ງຕ່າງໆຈຶ່ງບໍ່ຄືເກົ່າຕາມທີ່ເຄີຍເປັນ; ພວກເຈົ້າຄວນຟັງ ແລະ ເຊື່ອຟັງພຣະວັດຈະນະຂອງພຣະວິນຍານຂອງເຮົາ, ຕິດຕາມພາລະກິດຂອງເຮົາຢ່າງໃກ້ຊິດ ແລະ ອາດບໍ່ແຍກພຣະວິນຍານ ແລະ ເນື້ອໜັງຂອງເຮົາອອກຈາກກັນ ເພາະວ່າ ໂດຍທຳມະຊາດແລ້ວ ພວກເຮົາແມ່ນໜຶ່ງດຽວ ແລະ ບໍ່ໄດ້ຕ່າງຈາກກັນ. ໃນສິ່ງນີ້ ເພື່ອປ້ອງກັນບໍ່ໃຫ້ຜູ້ຄົນລະເລີຍຕໍ່ພຣະເຈົ້າທີ່ບັງເກີດເປັນມະນຸດ ຈຶ່ງຂໍເນັ້ນອີກຄັ້ງວ່າ "ພວກເຮົາແມ່ນໜຶ່ງດຽວ ແລະ ບໍ່ໄດ້ຕ່າງຈາກກັນ"; ເພາະວ່າການລະເລີຍດັ່ງກ່າວແມ່ນຄວາມລົ້ມເຫຼວຂອງມະນຸດ, ສິ່ງນີ້ຈຶ່ງຖືກລະບຸເຂົ້າໃນບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າອີກຄັ້ງ. ຕໍ່ມາ ພຣະເຈົ້າແຈ້ງຜູ້ຄົນກ່ຽວກັບຜົນທີ່ຕາມມາຂອງການລະເມີດພຣະບັດຍັດແຫ່ງການບໍລິຫານຂອງພຣະເຈົ້າຢ່າງເປີດເຜີຍ ໂດຍກ່າວວ່າ "ພວກເຂົາຈະຕ້ອງທົນທຸກກັບການສູນເສຍ ແລະ ຈະສາມາດດື່ມໄດ້ແຕ່ຈາກຈອກທີ່ຂົມຂື່ນຂອງພວກເຂົາເທົ່ານັ້ນ". ຍ້ອນວ່າ ມະນຸດອ່ອນແອ, ຫຼັງຈາກທີ່ໄດ້ຍິນພຣະທຳເຫຼົ່ານີ້ແລ້ວ ເຂົາຈຶ່ງບໍ່ສາມາດຊ່ວຍໄດ້ ນອກຈາກລະວັງພຣະເຈົ້າທີ່ຢູ່ໃນໃຈຂອງເຂົາຍ້ອນ "ຈອກທີ່ຂົມຂື່ນ" ແມ່ນພຽງພໍທີ່ຈະເຮັດໃຫ້ຜູ້ຄົນໄຕ່ຕອງໜ້ອຍໜຶ່ງ. ຜູ້ຄົນມີຄຳນິຍາມຫຼາຍກ່ຽວກັບ

"ຈອກທີ່ຂົມຂື່ນ" ນີ້ທີ່ພຣະເຈົ້າກ່າວວ່າ: ການຖືກພຣະທຳພິພາກສາ ຫຼື ຖືກຂັບໄລ່ອອກຈາກອານາຈັກ ຫຼື ການຖືກແຍກອອກເປັນໄລຍະເວລາໜຶ່ງ ຫຼື ການທີ່ເນື້ອໜັງຂອງມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ຖືກວິນຍານຊົ່ວຮ້າຍຄອບງຳ ຫຼື ການຖືກພຣະວິນຍານຂອງພຣະເຈົ້າປະຖິ້ມ ຫຼື ການທີ່ເນື້ອໜັງຂອງມະນຸດຖືກກຳຈັດ ແລະ ສົ່ງໄປຍັງແດນມໍລະນາ. ການນິຍາມເຫຼົ່ານີ້ແມ່ນສາມາດບັນລຸໄດ້ໂດຍຄວາມຄິດຂອງຜູ້ຄົນ ແລະ ດ້ວຍເຫດນັ້ນ ໃນຈິນຕະນາການຂອງພວກເຂົາ ຜູ້ຄົນຈຶ່ງບໍ່ສາມາດໄປໄກກວ່າສິ່ງເຫຼົ່ານີ້. ແຕ່ຄວາມຄິດຂອງພຣະເຈົ້າແມ່ນບໍ່ຄືກັບຄວາມຄິດຂອງມະນຸດ; ໝາຍຄວາມວ່າ "ຈອກທີ່ຂົມຂື່ນ" ບໍ່ໄດ້ໝາຍເຖິງສິ່ງໃດໜຶ່ງທີ່ຢູ່ຂ້າງເທິງ ແຕ່ໝາຍເຖິງຂອບເຂດຂອງຄວາມຮູ້ຂອງຜູ້ຄົນກ່ຽວກັບພຣະເຈົ້າພາຍຫຼັງທີ່ໄດ້ຮັບການຈັດການຂອງພຣະເຈົ້າ. ເວົ້າໃຫ້ຊັດເຈນກວ່ານີ້ກໍຄື, ເມື່ອບາງຄົນແຍກພຣະວິນຍານຂອງພຣະເຈົ້າ ແລະ ພຣະທຳຂອງພຣະເຈົ້າໂດຍອຳເພີໃຈ ຫຼື ແຍກພຣະທຳ ແລະ ຄົນ ຫຼື ພຣະວິນຍານ ແລະ ເນື້ອໜັງ ທີ່ພຣະອົງໃຊ້ຫໍ່ຫຸ້ມຕົວເອງ, ຄົນດັ່ງກ່າວນີ້ແມ່ນພຽງແຕ່ບໍ່ສາມາດຮູ້ຈັກພຣະເຈົ້າໃນພຣະທຳຂອງພຣະເຈົ້າເທົ່ານັ້ນ ແຕ່ພ້ອມນັ້ນ ຖ້າພວກເຂົາເກີດມີຄວາມສົງໄສກ່ຽວກັບພຣະເຈົ້າ, ພວກເຂົາກໍຈະຕາບອດໃນທຸກດ້ານ. ມັນບໍ່ແມ່ນຄືດັ່ງທີ່ຜູ້ຄົນໄດ້ຈິນຕະນາການໄວ້ວ່າ ພວກເຂົາຖືກຕັດຂາດໂດຍກົງ; ກົງກັນຂ້າມ ພວກເຂົາໄດ້ຕົກໄປສູ່ການຂ້ຽນຕີຂອງພຣະເຈົ້າເທື່ອລະໜ້ອຍ ເຊິ່ງຖ້າຈະເວົ້າໄປແລ້ວ ພວກເຂົາແມ່ນຕົກສູ່ຄວາມພິນາດຢ່າງໃຫຍ່ຫຼວງ ແລະ ບໍ່ມີໃຜສາມາດເຂົ້າກັບພວກເຂົາໄດ້ ຄືກັບວ່າ ພວກເຂົາຖືກວິນຍານຊົ່ວຮ້າຍຄອບງຳ ແລະ ຄືກັບວ່າ ພວກເຂົາເປັນແມງວັນຫົວຂາດທີ່ບິນຕຳໄປທົ່ວທຸກບ່ອນ. ເຖິງຢ່າງນັ້ນກໍຕາມ ພວກເຂົາກໍຍັງບໍ່ສາມາດບິນໜີໄປໄດ້. ໃນໃຈຂອງພວກເຂົາ, ສິ່ງຕ່າງໆແມ່ນຍາກທີ່ຈະບັນຍາຍ ຄືກັບວ່າ ມີຄວາມທຸກທໍລະມານຢູ່ໃນໃຈຂອງພວກເຂົາທີ່ບໍ່ສາມາດບັນຍາຍໄດ້ ແຕ່ພວກເຂົາກໍບໍ່ຍອມເປີດປາກຂອງພວກເຂົາ ແລະ ໃຊ້ເວລາໝົດມື້ຢູ່ກັບຄວາມມົວໝອງ, ບໍ່ສາມາດສຳຜັດເຖິງພຣະເຈົ້າໄດ້. ຍ້ອນພາຍໃຕ້ສະຖານະການເຫຼົ່ານີ້ ບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າຈຶ່ງໄດ້ຂົ່ມຂູ່ພວກເຂົາ ເພື່ອວ່າພວກເຂົາຈະບໍ່ກ້າໜີອອກຈາກຄຣິສຕະຈັກ ເຖິງວ່າຈະບໍ່ມີຄວາມສຸກກໍຕາມ. ນີ້ແມ່ນສິ່ງທີ່ເອີ້ນວ່າ "ການໂຈມຕີພາຍໃນ ແລະ ພາຍນອກ" ແລະ ຍາກຫຼາຍທີ່ຜູ້ຄົນຈະທົນໄດ້. ສິ່ງທີ່ຖືກກ່າວຢູ່ນີ້ແມ່ນແຕກຕ່າງຈາກແນວຄວາມຄິດຂອງຜູ້ຄົນ ແລະ ນັ້ນກໍເພາະວ່າ ພາຍໃຕ້ສະຖານະການເຫຼົ່ານັ້ນ ພວກເຂົາຍັງຮູ້ຈັກສະແຫວງຫາພຣະເຈົ້າ ແລະ ສິ່ງນີ້ເກີດຂຶ້ນ ເມື່ອພຣະເຈົ້າຫັນຫຼັງຂອງພຣະອົງໃສ່ພວກເຂົາ ແລະ ສຳຄັນໄປກວ່ານັ້ນກໍຄື ພວກເຂົາບໍ່ສາມາດສຳຜັດເຖິງພຣະເຈົ້າໄດ້ທັງໝົດຄືກັບຜູ້ທີ່ມີຄວາມເຊື່ອ. ພຣະເຈົ້າບໍ່ຊ່ວຍຄົນດັ່ງກ່າວໂດຍກົງ; ເມື່ອຈອກທີ່ຂົມຂື່ນຂອງພວກເຂົາວ່າງເປົ່າ, ນັ້ນຄືເວລາທີ່ຍຸກສຸດທ້າຍໄດ້ມາເຖິງ. ແຕ່ໃນຂະນະນີ້ ພວກເຂົາຍັງສະແຫວງຫາຄວາມປະສົງຂອງພຣະເຈົ້າໂດຍປາດຖະໜາທີ່ຈະມີຄວາມສຸກອີກພຽງເລັກນ້ອຍ ແຕ່ໃນເວລານີ້ແມ່ນແຕກຕ່າງຈາກໃນອະດີດນອກຈາກວ່າ ຈະມີສະພາບການທີ່ພິເສດ.

ຈາກສິ່ງນີ້ ພຣະເຈົ້າຍັງອະທິບາຍດ້ານບວກໃຫ້ແກ່ທຸກຄົນ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງໄດ້ຮັບຊີວິດອີກຄັ້ງ ເນື່ອງຈາກວ່າ ໃນອະດີດ ພຣະເຈົ້າໄດ້ກ່າວໄວ້ວ່າ ຜູ້ບໍລິການແມ່ນບໍ່ມີຊີວິດ ແຕ່ໃນ

ປັດຈຸບັນ ພຣະເຈົ້າໄດ້ເວົ້າຢ່າງກະທັນຫັນກ່ຽວກັບ “ຊີວິດພາຍໃນ”. ເມື່ອມີການເວົ້າກ່ຽວກັບຊີວິດເທົ່ານັ້ນ ຜູ້ຄົນຈຶ່ງຈະຮູ້ຈັກວ່າ ຍັງສາມາດມີຊີວິດຂອງພຣະເຈົ້າຢູ່ພາຍໃນພວກເຂົາ. ດ້ວຍວິທີນີ້, ຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າຈຶ່ງຈະເພີ່ມຂຶ້ນຫຼາຍເທົ່າ ແລະ ພວກເຂົາຈະໄດ້ຮັບຄວາມຮູ້ທີ່ຍິ່ງໃຫຍ່ກ່ຽວກັບຄວາມຮັກ ແລະ ຄວາມເມດຕາຂອງພຣະເຈົ້າ. ສະນັ້ນ, ຫຼັງຈາກໄດ້ຍຶດໝັ້ນກັບພຣະທຳເຫຼົ່ານີ້, ທຸກຄົນກໍໄດ້ສຳນຶກເຖິງຄວາມຜິດພາດໃນອະດີດຂອງພວກເຂົາ ແລະ ຫຼັ່ງນໍ້າຕາດ້ວຍຄວາມສຳນຶກຜິດຢ່າງລັບໆ. ເຊັ່ນກັນ ຄົນສ່ວນໃຫຍ່ກໍຕັດສິນໃຈຢ່າງງຽບໆວ່າ ພວກເຂົາຕ້ອງເຮັດໃຫ້ພຣະເຈົ້າພໍໃຈ. ບາງຄັ້ງ ພຣະທຳຂອງພຣະເຈົ້າແມ່ນໄດ້ແທງເຂົ້າໃນສ່ວນເລິກສຸດຂອງຫົວໃຈຂອງຜູ້ຄົນ ໂດຍເຮັດໃຫ້ຜູ້ຄົນຍາກທີ່ຈະສາມາດຍອມຮັບເອົາສິ່ງເຫຼົ່ານັ້ນ ແລະ ເຮັດໃຫ້ຜູ້ຄົນຍາກທີ່ຈະມີຄວາມສັນຕິສຸກໄດ້. ບາງຄັ້ງ ພຣະທຳຂອງພຣະເຈົ້າແມ່ນມີຄວາມຈິງໃຈ ແລະ ຈິງຈັງ ແລະ ເຮັດໃຫ້ໃຈຂອງຜູ້ຄົນອົບອຸ່ນ ຈົນກະທັ້ງວ່າ ຫຼັງຈາກທີ່ຜູ້ຄົນໄດ້ອ່ານພຣະທຳເຫຼົ່ານັ້ນ ມັນກໍຄ້າຍຄືກັບຕອນທີ່ລູກແກະເຫັນແມ່ຂອງມັນອີກຄັ້ງຫຼັງຈາກທີ່ໄດ້ຫຼົງທາງເປັນເວລາຫຼາຍປີ. ຕາຂອງພວກເຂົາແມ່ນເຕັມໄປດ້ວຍນໍ້າຕາ, ພວກເຂົາຝ່າຟັນດ້ວຍຄວາມເສຍໃຈ ແລະ ພວກເຂົາປາດຖະໜາຢ່າງແຮງກ້າທີ່ຈະໂດດເຂົ້າໄປສູ່ອ້ອມກອດຂອງພຣະເຈົ້າ, ຮ້ອງໄຫ້ດ້ວຍຄວາມໂສກເສົ້າເສຍໃຈ, ລະບາຍຄວາມເຈັບປວດທີ່ບໍ່ສາມາດບັນຍາຍໄດ້ ທີ່ຢູ່ໃນໃຈຂອງພວກເຂົາເປັນເວລາຫຼາຍປີອອກມາ ເພື່ອສະແດງຄວາມຈົງຮັກພັກດີຂອງພວກເຂົາຕໍ່ພຣະເຈົ້າ. ເນື່ອງຈາກການທົດສອບເປັນເວລາຫຼາຍເດືອນ, ພວກເຂົາຈຶ່ງມີຄວາມອ່ອນໄຫວເກີນໄປ ຄືກັບວ່າ ພວກເຂົາຫາກໍທົນທຸກກັບຄວາມວິຕົກກັງວົນ ຄືກັບຄົນເຈັບທີ່ຊ່ວຍຕົນເອງບໍ່ໄດ້ທີ່ນອນຕິດຕຽງເປັນເວລາຫຼາຍປີ. ເພື່ອເຮັດໃຫ້ພວກເຂົາໝັ້ນໃຈກັບຄວາມເຊື່ອຂອງພວກເຂົາໃນພຣະທຳຂອງພຣະເຈົ້າ, ຫຼາຍຄັ້ງ ພຣະເຈົ້າຈຶ່ງໄດ້ເນັ້ນກ່າວໃນສິ່ງຕໍ່ໄປນີ້: “ເພື່ອໃຫ້ຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາດຳເນີນໄປຢ່າງດີ ໂດຍບໍ່ມີສິ່ງໃດຂັດຂວາງ ເຮົາຈຳເປັນຕ້ອງນຳໃຊ້ຄວາມບໍລິສຸດຂອງພຣະທຳ ເພື່ອທົດສອບທຸກຄົນທີ່ຢູ່ໃນເຮືອນຂອງເຮົາ”. ໃນນີ້ ພຣະເຈົ້າກ່າວວ່າ “ທົດສອບທຸກຄົນທີ່ຢູ່ໃນເຮືອນຂອງເຮົາ”; ການອ່ານພຣະທຳເຫຼົ່ານີ້ຢ່າງລະອຽດບອກໃຫ້ຮູ້ວ່າ ເມື່ອຜູ້ຄົນສະແດງຕົນເປັນຜູ້ບໍລິການ ພວກເຂົາກໍຍັງເປັນຄົນທີ່ຢູ່ພາຍໃນເຮືອນຂອງພຣະເຈົ້າ. ຍິ່ງໄປກວ່ານັ້ນ, ພຣະທຳເຫຼົ່ານີ້ແມ່ນເນັ້ນເຖິງຄວາມເປັນຈິງຂອງພຣະເຈົ້າຕໍ່ຕຳແໜ່ງ “ປະຊາຊົນຂອງພຣະເຈົ້າ” ໂດຍເຮັດໃຫ້ພວກເຂົາເບົາໃຈຂຶ້ນ. ແລ້ວເປັນຫຍັງພຣະເຈົ້າຈຶ່ງຊີ້ໃຫ້ເຫັນຊໍ້າແລ້ວຊໍ້າອີກເຖິງການສະແດງອອກທັງຫຼາຍໃນຜູ້ຄົນຫຼັງຈາກທີ່ພວກເຂົາໄດ້ອ່ານພຣະທຳຂອງພຣະເຈົ້າ ຫຼື ເມື່ອຕຳແໜ່ງ “ປະຊາຊົນຂອງພຣະເຈົ້າ” ຍັງບໍ່ຖືກເປີດເຜີຍ? ມັນບໍ່ແມ່ນເພື່ອສະແດງໃຫ້ເຫັນວ່າ ພຣະເຈົ້າແມ່ນພຣະເຈົ້າ ທີ່ເບິ່ງເລິກເຂົ້າໄປໃນໃຈຂອງມະນຸດບໍ? ນີ້ແມ່ນສ່ວນໜຶ່ງຂອງເຫດຜົນ ແລະ ໃນນີ້ ມັນແມ່ນຄວາມສຳຄັນໃນລຳດັບທີສອງເທົ່ານັ້ນ. ພຣະເຈົ້າເຮັດເຊັ່ນນັ້ນ ເພື່ອເຮັດໃຫ້ທຸກຄົນໝັ້ນໃຈຢ່າງເຕັມທີ່, ເພື່ອວ່າຈາກພຣະທຳຂອງພຣະເຈົ້າ ທຸກຄົນອາດຈະຮູ້ກ່ຽວກັບຄວາມຂາດຕົກບົກຜ່ອງຂອງພວກເຂົາເອງ ແລະ ຮູ້ກ່ຽວກັບຄວາມຂາດເຂີນໃນຊີວິດຜ່ານມາຂອງພວກເຂົາ ແລະ ສຳຄັນໄປກວ່ານັ້ນ ກໍແມ່ນເພື່ອວາງພື້ນຖານສຳລັບຂັ້ນຕອນຕໍ່ໄປຂອງພາລະກິດ. ຜູ້ຄົນສາມາດພະຍາຍາມຮູ້ຈັກພຣະເຈົ້າ ແລະ ສະແຫວງຫາ

ເພື່ອເຮັດຕາມແບບຢ່າງຂອງພຣະເຈົ້າ ໂດຍອີງໃສ່ພື້ນຖານຂອງການຮູ້ຈັກພວກເຂົາເອງ. ຍ້ອນພຣະທຳເຫຼົ່ານີ້, ຜູ້ຄົນຈຶ່ງປ່ຽນແປງຈາກການເປັນຜູ້ທີ່ມີຄວາມຄິດລົບ ແລະ ບໍ່ຫ້າວຫັນ ມາເປັນຜູ້ທີ່ມີຄວາມຄິດບວກ ແລະ ເປັນຜູ້ຫ້າວຫັນ ແລະ ນີ້ໄດ້ປູກຮາກຖານສຳລັບພາກທີສອງຂອງພາລະກິດຂອງພຣະເຈົ້າ. ມັນສາມາດເວົ້າໄດ້ວ່າ ການມີຂັ້ນຕອນຂອງພາລະກິດນີ້ເປັນພື້ນຖານ, ພາກທີສອງຂອງພາລະກິດຂອງພຣະເຈົ້າຈຶ່ງໄດ້ກາຍເປັນສິ່ງທີ່ເຮັດໄດ້ງ່າຍຂຶ້ນ ໂດຍໃຊ້ຄວາມພະຍາຍາມພຽງໜ້ອຍດຽວ. ສະນັ້ນ, ເມື່ອຜູ້ຄົນກຳຈັດຄວາມໂສກເສົ້າພາຍໃນໃຈຂອງພວກເຂົາ ແລະ ກາຍເປັນຜູ້ທີ່ມີຄວາມຄິດບວກ ແລະ ເປັນຜູ້ທີ່ຫ້າວຫັນ, ພຣະເຈົ້າໃຊ້ໂອກາດນີ້ໃຫ້ຄຸ້ມຄ່າ ເພື່ອສ້າງເງື່ອນໄຂອື່ນສຳລັບປະຊາຊົນຂອງພຣະອົງ: "ພຣະທຳຂອງເຮົາຖືກປ່ອຍອອກ ແລະ ຖືກສະແດງອອກມາໃນເວລາ ຫຼື ສະຖານທີ່ໃດກໍໄດ້ ແລະ ເຊັ່ນດຽວກັນນັ້ນ ພວກເຈົ້າກໍຄວນຮູ້ຈັກຕົວເອງໃນທຸກເວລາທີ່ຢູ່ຕໍ່ໜ້າເຮົາ. ຢ່າງໃດກໍຕາມ ເປັນເພາະວ່າ ປັດຈຸບັນບໍ່ຄືກັບສິ່ງທີ່ມາກ່ອນໜ້ານັ້ນ ແລະ ເຈົ້າບໍ່ສາມາດເຮັດສິ່ງໃດທີ່ເຈົ້າປາຖະໜາໃຫ້ສຳເລັດໄດ້ອີກຕໍ່ໄປ. ກົງກັນຂ້າມ, ພາຍໃຕ້ການຊີ້ນຳຂອງພຣະທຳຂອງເຮົາ ເຈົ້າຕ້ອງມີຄວາມສາມາດເອົາຊະນະຮ່າງກາຍຂອງເຈົ້າ, ເຈົ້າຕ້ອງໃຊ້ພຣະທຳຂອງເຮົາເປັນຫຼັກສຳຄັນ ແລະ ບໍ່ຕ້ອງກະທຳໂດຍບໍ່ລະມັດລະວັງ". ໃນນີ້, ພຣະເຈົ້າສ່ວນໃຫຍ່ແມ່ນເນັ້ນ "ພຣະທຳຂອງເຮົາ"; ເຊັ່ນກັນໃນອະດີດພຣະອົງກໍໄດ້ອີງໃສ່ "ພຣະທຳຂອງເຮົາ" ຫຼາຍຄັ້ງ ແລະ ດ້ວຍເຫດນັ້ນ ແຕ່ລະຄົນຈຶ່ງບໍ່ສາມາດຊ່ວຍຫຍັງໄດ້ ນອກຈາກຫັນຄວາມສົນໃຈຂອງພວກເຂົາໃສ່ສິ່ງນີ້. ສະນັ້ນ, ຈຶ່ງບົ່ງບອກເຖິງແກ່ນແທ້ຂອງຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະເຈົ້າ: ທຸກຄົນຈະຫັນຄວາມສົນໃຈຂອງພວກເຂົາໄປໃສ່ພຣະທຳຂອງພຣະເຈົ້າ ແລະ ອາດບໍ່ມີຄວາມຮັກອື່ນໃດອີກ. ທຸກຄົນຕ້ອງຖະໜອມພຣະທຳທີ່ກ່າວອອກຈາກປາກຂອງພຣະເຈົ້າ ແລະ ບໍ່ຫຼິ້ນກັບພຣະທຳເຫຼົ່ານັ້ນ; ດ້ວຍເຫດນັ້ນ ສະພາບການກ່ອນໜ້ານັ້ນໃນຄຣິສຕະຈັກກໍຈະສິ້ນສຸດລົງ ໃນເມື່ອຄົນໜຶ່ງອ່ານພຣະທຳຂອງພຣະເຈົ້າ ແລະ ຫຼາຍຄົນມັກຈະເວົ້າວ່າ ອາເມນ ແລະ ກໍໃຫ້ຄວາມເຊື່ອຟັງ. ໃນເວລານັ້ນ ຜູ້ຄົນແມ່ນບໍ່ຮູ້ຈັກພຣະທຳຂອງພຣະເຈົ້າ ແຕ່ໃຊ້ພຣະທຳເຫຼົ່ານັ້ນເປັນອາວຸດເພື່ອປ້ອງກັນຕົວເອງ. ເພື່ອປ່ຽນແປງສິ່ງນີ້, ພຣະເຈົ້າຈຶ່ງໄດ້ສ້າງຄວາມຮຽກຮ້ອງໃໝ່ ແລະ ສູງກວ່າເກົ່າເທິງແຜ່ນດິນໂລກໃຫ້ແກ່ມະນຸດ. ເພື່ອຢຸດຜູ້ຄົນຈາກການເປັນຜູ້ທີ່ມີຄວາມຄິດລົບ ແລະ ບໍ່ຫ້າວຫັນ ຫຼັງຈາກເຫັນມາດຕະຖານທີ່ສູງກວ່າເກົ່າ ແລະ ເງື່ອນໄຂທີ່ເຂັ້ມງວດຂອງພຣະເຈົ້າ, ພຣະເຈົ້າກໍໄດ້ຊຸກຍູ້ຜູ້ຄົນຫຼາຍຄັ້ງໂດຍກ່າວວ່າ: "ເນື່ອງຈາກສິ່ງຕ່າງໆໄດ້ມາຮອດສະຖານະການໃນປັດຈຸບັນ, ພວກເຈົ້າບໍ່ຈຳເປັນຕ້ອງຮູ້ສຶກເສົ້າ ແລະ ເສຍໃຈຫຼາຍກ່ຽວກັບການກະທຳ ແລະ ການປະຕິບັດຂອງພວກເຈົ້າໃນອະດີດ. ຄວາມມີໃຈເອື້ອເຟື້ອເພື່ອແຜ່ຂອງເຮົາແມ່ນບໍ່ມີຂອບເຂດຄືກັບທະເລ ແລະ ທ້ອງຟ້າ. ເປັນໄປໄດ້ບໍ ທີ່ຄວາມສາມາດ ແລະ ຄວາມຮູ້ຂອງມະນຸດກ່ຽວກັບເຮົາແມ່ນເປັນສິ່ງທີ່ເຮົາບໍ່ຄຸ້ນເຄີຍຄືກັບຫຼັງມືຂອງເຮົາ?" ພຣະທຳທີ່ຈິງຈັງ ແລະ ຈິງໃຈເຫຼົ່ານີ້ໄດ້ເປີດແນວຄິດຂອງຜູ້ຄົນຢ່າງກະທັນຫັນ ແລະ ທັນທີທັນໃດ ກໍນຳພາພວກເຂົາອອກຈາກຄວາມໝົດຫວັງໄປສູ່ຄວາມຮັກຕໍ່ພຣະເຈົ້າ, ໄປສູ່ຄວາມຄິດບວກ ແລະ ຄວາມຫ້າວຫັນ ເພາະວ່າ ພຣະເຈົ້າເວົ້າໂດຍຍຶດເອົາຄວາມອ່ອນແອພາຍໃນໃຈຂອງຜູ້ຄົນ. ຖ້າບໍ່ຮູ້ຈັກສິ່ງນີ້, ຜູ້ຄົນກໍຈະຮູ້ສຶກອັບອາຍຕະຫຼອດເມື່ອຢູ່ຕໍ່ໜ້າ

ພຣະເຈົ້າ ຍ້ອນການກະທຳໃນອະດີດຂອງພວກເຂົາ ແລະ ພວກເຂົາຈະສະແດງຄວາມສຳນຶກຜິດຊ້ຳແລ້ວຊ້ຳອີກ. ສະນັ້ນ, ພຣະເຈົ້າຈຶ່ງເປີດເຜີຍພຣະທຳເຫຼົ່ານີ້ ໂດຍສະເພາະແບບທຳມະຊາດ ແລະ ແບບປົກກະຕິ ເພື່ອວ່າ ຜູ້ຄົນຈະບໍ່ຮູ້ສຶກວ່າ ພຣະທຳຂອງພຣະເຈົ້າແມ່ນແຂງກະດ້າງ ແລະ ບໍ່ມີຊີວິດຊີວາ ແຕ່ທັງສອງຢ່າງແມ່ນມີຄວາມເຂັ້ມແຂງ ແລະ ຄວາມອ່ອນໂຍນ ແລະ ແຈ່ມໃສ ແລະ ຄ້າຍຄືກັບຊີວິດຈິງ.

ຈາກການຊົງສ້າງຈົນເຖິງປັດຈຸບັນ, ພຣະເຈົ້າໄດ້ຈັດແຈງທຸກສິ່ງຢ່າງງຽບໆສຳລັບມະນຸດຈາກໂລກແຫ່ງວິນຍານ ແລະ ບໍ່ເຄີຍພັນລະນາເຖິງຄວາມຈິງຂອງໂລກແຫ່ງວິນຍານໃຫ້ກັບມະນຸດ. ແຕ່ໃນປັດຈຸບັນ ພຣະເຈົ້າໄດ້ໃຫ້ພາບລວມກ່ຽວກັບການຕໍ່ສູ້ທີ່ຮຸນແຮງພາຍໃນສິ່ງນີ້ຢ່າງກະທັນຫັນ ເຊິ່ງໂດຍທຳມະຊາດແລ້ວ ແມ່ນປະໃຫ້ຜູ້ຄົນສັບສົນ ເຊິ່ງເພີ່ມຄວາມຮູ້ສຶກຂອງພວກເຂົາທີ່ວ່າ ພຣະເຈົ້າມີຄວາມເລິກເຊິ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້ ແລະ ເຮັດໃຫ້ພວກເຂົາຊອກຫາແຫຼ່ງທີ່ມາຂອງພຣະທຳຂອງພຣະເຈົ້າໄດ້ຍາກຂຶ້ນກວ່າເກົ່າ. ສາມາດເວົ້າໄດ້ວ່າ ສະພາບແຫ່ງການຕໍ່ສູ້ຂອງໂລກແຫ່ງວິນຍານໄດ້ນຳເອົາທຸກຄົນເຂົ້າມາຢູ່ໃນວິນຍານ. ນີ້ແມ່ນພາກສ່ວນສຳຄັນທຳອິດຂອງພາລະກິດໃນອະນາຄົດ ແລະ ເປັນເຄື່ອງໝາຍບົ່ງບອກວ່າ ຜູ້ຄົນອາດເຂົ້າສູ່ອະນາຈັກວິແຫ່ງນຍານ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະເຈົ້າແມ່ນແນໃສ່ຈິດໃຈເປັນຫຼັກ, ເປົ້າໝາຍຫຼັກເພື່ອມອບຄວາມຮູ້ທີ່ຍິ່ງໃຫຍ່ໃຫ້ແກ່ຜູ້ຄົນ ກ່ຽວກັບການກະທຳທີ່ມະຫັດສະຈັນຂອງພຣະວິນຍານຂອງພຣະເຈົ້າພາຍໃນເນື້ອໜັງ, ແລ້ວໃນທີ່ສຸດ ກໍມອບຄວາມຮູ້ທີ່ຍິ່ງໃຫຍ່ກ່ຽວກັບຄວາມໂງ່ຈ້າຂອງຊາຕານ ແລະ ທຳມະຊາດຂອງຊາຕານໃຫ້ແກ່ທຸກຄົນທີ່ຈິງຮັກພັກດີຕໍ່ພຣະເຈົ້າ. ເຖິງແມ່ນວ່າ ພວກເຂົາບໍ່ໄດ້ເກີດໃນໂລກວິນຍານ ແຕ່ພວກເຂົາກໍຮູ້ສຶກຄືກັບວ່າ ພວກເຂົາໄດ້ເຫັນຊາຕານ ແລະ ເມື່ອພວກເຂົາມີຄວາມຮູ້ສຶກນີ້ ພຣະເຈົ້າກໍປ່ຽນເປັນວິທີການເວົ້າແບບອື່ນທັນທີ ແລະ ເມື່ອຜູ້ຄົນໄດ້ຮັບວິທີຄິດແບບນີ້ ພຣະເຈົ້າກໍຖາມວ່າ: "ເປັນຫຍັງເຮົາຈຶ່ງຕ້ອງເຝິກອົບຮົມພວກເຈົ້າຢ່າງຮີບດ່ວນ? ເປັນຫຍັງເຮົາຈຶ່ງບອກຄວາມຈິງແກ່ພວກເຈົ້າກ່ຽວກັບໂລກວິນຍານ? ເປັນຫຍັງເຮົາຈຶ່ງເຕືອນ ແລະ ແນະນຳພວກເຈົ້າຊ້ຳແລ້ວຊ້ຳອີກ?" ແລະ ອື່ນໆ ເຊິ່ງເປັນຄຳຖາມທີ່ກໍ່ໃຫ້ເກີດຫຼາຍຄຳຖາມໃນສະໝອງຂອງຜູ້ຄົນ: ເປັນຫຍັງພຣະເຈົ້າຈຶ່ງເວົ້າໃນນ້ຳສຽງນີ້? ເປັນຫຍັງພຣະອົງຈຶ່ງເວົ້າກ່ຽວກັບເລື່ອງຂອງໂລກແຫ່ງວິນຍານ ແລະ ບໍ່ກ່ຽວກັບຄວາມຕ້ອງການຂອງພຣະອົງທີ່ມີຕໍ່ຜູ້ຄົນໃນລະຫວ່າງການສ້າງຄຣິສຕະຈັກ? ເປັນຫຍັງພຣະເຈົ້າຈຶ່ງບໍ່ໂຈມຕີແນວຄວາມຄິດຂອງຜູ້ຄົນໂດຍການເປີດເຜີຍຄວາມລຶກລັບ? ຖ້າມະນຸດມີຄວາມຮອບຄອບພຽງໜ້ອຍດຽວກໍຈະໄດ້ຮັບຄວາມຮູ້ເລັກນ້ອຍກ່ຽວກັບຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ເມື່ອພວກເຂົາຜະເຊີນກັບການຫຼອກລວງໃນອະນາຄົດ ຄວາມຮູ້ສຶກກຽດຊັງຊາຕານທີ່ແທ້ຈິງກໍຈະມີຂຶ້ນພາຍໃນພວກເຂົາ. ແມ່ນແຕ່ໃນເວລາທີ່ພວກເຂົາຕ້ອງຜະເຊີນກັບການທົດສອບໃນອະນາຄົດ ພວກເຂົາກໍຍັງຈະສາມາດຮູ້ຈັກພຣະເຈົ້າ ແລະ ກຽດຊັງຊາຕານຢ່າງໜັກ ແລະ ໃນທີ່ສຸດ ກໍຈະສາບແຊ່ງຊາຕານ.

ສຸດທ້າຍ, ຄວາມປະສົງຂອງພຣະເຈົ້າກໍຈະຖືກເປີດເຜີຍທັງໝົດໂດຍມະນຸດ: "ຍິນຍອມໃຫ້ພຣະທຳແຕ່ລະຂໍ້ຂອງເຮົາມີຮາກຖານ, ອອກດອກ ແລະ ອອກໝາກພາຍໃນຈິດໃຈຂອງເຈົ້າ ແລະ

ສຳຄັນໄປກວ່ານັ້ນແມ່ນເພື່ອການອອກໝາກຫຼາຍຂຶ້ນ. ນີ້ກໍເພາະວ່າ ສິ່ງທີ່ເຮົາຂໍບໍ່ແມ່ນດອກໄມ້ທີ່ສົດໃສ ແລະ ຂຽວງາມ ແຕ່ເປັນໝາກໄມ້ທີ່ອຸດົມສົມບູນ ທີ່ບໍ່ສູນເສຍຄວາມສຸກຂອງມັນ”. ໃນບັນດາຄວາມຕ້ອງການຫຼາຍຂໍ້ຂອງພຣະເຈົ້າທີ່ມີຕໍ່ປະຊາຊົນຂອງພຣະອົງ, ສິ່ງນີ້ແມ່ນສິ່ງລະອຽດທີ່ສຸດ, ສິ່ງນີ້ແມ່ນຈຸດສູນກາງ ແລະ ຖືກດຳເນີນໄປຂ້າງໜ້າໃນຮູບແບບທີ່ກົງໄປກົງມາ. ເຮົາໄດ້ປ່ຽນແປງຈາກການເຮັດພາລະກິດໃນຄວາມເປັນມະນຸດປົກກະຕິ ໄປເປັນການເຮັດພາລະກິດໃນຄວາມເປັນພຣະເຈົ້າ; ສະນັ້ນ, ໃນອະດີດ ໃນພຣະທຳທີ່ທຳມະດາຂອງເຮົາ, ເຮົາບໍ່ຈຳເປັນຕ້ອງເພີ່ມຄຳອະທິບາຍເພີ່ມເຕີມ ແລະ ຄົນສ່ວນໃຫຍ່ແມ່ນສາມາດເຂົ້າໃຈຄວາມໝາຍຂອງພຣະທຳຂອງເຮົາ. ຜົນກໍຄື ໃນເມື່ອກ່ອນສິ່ງດຽວທີ່ຕ້ອງການແມ່ນຜູ້ຄົນພຽງມາຮູ້ຈັກພຣະທຳຂອງເຮົາ ແລະ ສາມາດເວົ້າກ່ຽວກັບຄວາມເປັນຈິງ. ຢ່າງໃດກໍຕາມ, ຂັ້ນຕອນນີ້ແມ່ນມີຄວາມແຕກຕ່າງຫຼາຍ. ຄວາມເປັນພຣະເຈົ້າຂອງເຮົາໄດ້ຄວບຄຸມທຸກສິ່ງທັງໝົດ ແລະ ບໍ່ມີສ່ວນໃດທີ່ຄວບຄຸມຈາກຄວາມເປັນມະນຸດ. ສະນັ້ນ, ຖ້າຜູ້ທີ່ຢູ່ໃນທ່າມກາງປະຊາຊົນຂອງເຮົາປາດຖະໜາທີ່ຈະເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງເຮົາ ພວກເຂົາກໍຈະມີຄວາມລຳບາກທີ່ສຸດ. ເມື່ອຜ່ານພຣະວັດຈະນະຂອງເຮົາເທົ່ານັ້ນ ພວກເຂົາຈຶ່ງຈະສາມາດໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງ ແລະ ຖ້າບໍ່ຜ່ານຊ່ອງທາງນີ້ ຄວາມຫວັງທີ່ຈະເຂົ້າໃຈເປົ້າໝາຍຂອງພຣະທຳຂອງເຮົາແມ່ນເປັນພຽງຄວາມຝັນກາງເວັນທີ່ບໍ່ມີປະໂຫຍດຫຍັງທັງສິ້ນ. ເມື່ອທຸກຄົນມີຄວາມຮູ້ຫຼາຍຂຶ້ນກ່ຽວກັບເຮົາ ຫຼັງຈາກຍອມຮັບພຣະວັດຈະນະຂອງເຮົາ ນັ້ນແມ່ນເວລາທີ່ປະຊາຊົນຂອງເຮົາໄດ້ດຳລົງຢູ່ກັບເຮົາ, ແມ່ນເວລາທີ່ພາລະກິດຂອງເຮົາໃນເນື້ອໜັງໄດ້ສຳເລັດ ແລະ ເປັນເວລາທີ່ຄວາມເປັນພຣະເຈົ້າຂອງເຮົາທັງໝົດດຳລົງຢູ່ໃນເນື້ອໜັງ. ໃນເວລານີ້, ທຸກຄົນຈະຮູ້ຈັກເຮົາໃນເນື້ອໜັງ ແລະ ສາມາດເວົ້າໄດ້ຢ່າງແທ້ຈິງວ່າ ພຣະເຈົ້າປາກົດໃນເນື້ອໜັງ ແລະ ນີ້ກໍຈະແມ່ນໝາກຜົນ. ນີ້ແມ່ນຫຼັກຖານພິສູດເພີ່ມເຕີມວ່າ ພຣະເຈົ້າໄດ້ເບື່ອໜ່າຍກັບການສ້າງຄຣິສຕະຈັກ. ນັ້ນກໍຄື “ເຖິງວ່າ ດອກໄມ້ໃນເຮືອນແກ້ວແມ່ນມີຫຼາຍຄືກັບດວງດາວ ແລະ ດຶງດູດຝູງຊົນທີ່ຊື່ນຊົມ ແຕ່ເມື່ອພວກມັນແຫ່ວພວກມັນກໍຈະຖືກຈົກຂາດເປັນສິ້ນໆຄືກັບແຜນອັນຊົ່ວຮ້າຍຂອງຊາຕານ ແລະ ຈະບໍ່ມີໃຜສົນໃຈພວກມັນ”. ເຖິງແມ່ນວ່າ ພຣະເຈົ້າຍັງເຮັດພາລະກິດດ້ວຍຕົວເອງໃນລະຫວ່າງການສ້າງຄຣິສຕະຈັກ ແຕ່ຍ້ອນພຣະອົງແມ່ນພຣະເຈົ້າທີ່ໃໝ່ຕະຫຼອດ ແລະ ບໍ່ເຄີຍເກົ່າ ພຣະອົງຈຶ່ງບໍ່ມີຄວາມຄິດກ່ຽວກັບເລື່ອງຂອງອະດີດ. ເພື່ອຢຸດຜູ້ຄົນບໍ່ໃຫ້ຄິດກ່ຽວກັບເລື່ອງອະດີດ ພຣະອົງໄດ້ໃຊ້ພຣະທຳທີ່ວ່າ “ພວກມັນກໍຈະຖືກຈົກຂາດເປັນສິ້ນໆຄືກັບແຜນອັນຊົ່ວຮ້າຍຂອງຊາຕານ” ເຊິ່ງສະແດງໃຫ້ເຫັນວ່າ ພຣະເຈົ້າບໍ່ເຮັດຕາມທິດສະດີ. ບາງຄົນອາດຕີຄວາມໝາຍຄວາມປະສົງຂອງພຣະເຈົ້າຜິດ ແລະ ຈະຖາມວ່າ: ໃນເມື່ອນີ້ແມ່ນພາລະກິດທີ່ເຮັດໂດຍພຣະເຈົ້າເອງ ແລ້ວເປັນຫຍັງພຣະອົງຈຶ່ງເວົ້າວ່າ “ແຕ່ເມື່ອພວກມັນແຫ່ວກໍຈະບໍ່ມີໃຜສົນໃຈພວກມັນ”? ພຣະທຳເຫຼົ່ານີ້ໄດ້ໃຫ້ການເປີດເຜີຍແກ່ຜູ້ຄົນ. ສິ່ງທີ່ສຳຄັນທີ່ສຸດກໍຄືການທີ່ພວກເຂົາຍອມໃຫ້ທຸກຄົນມີຈຸດເລີ່ມຕົ້ນໃໝ່ ແລະ ຖືກຕ້ອງ ແລະ ຫຼັງຈາກນັ້ນເທົ່ານັ້ນພວກເຂົາຈຶ່ງຈະສາມາດຕອບສະໜອງຄວາມປະສົງຂອງພຣະເຈົ້າ. ໃນທີ່ສຸດ, ປະຊາຊົນຂອງພຣະເຈົ້າກໍຈະສາມາດມອບຄຳສັນລະເສີນທີ່ແທ້ຈິງໃຫ້ແກ່ພຣະເຈົ້າ ໂດຍບໍ່ມີການບັງຄັບ ແຕ່ເປັນສິ່ງທີ່ມາຈາກ

ໃຈຂອງພວກເຂົາ. ນີ້ແມ່ນແກ່ນແທ້ຂອງແຜນການຄຸ້ມຄອງ 6.000 ປີຂອງພຣະເຈົ້າ. ນັ້ນກໍຄື ແກ້ວຜະລຶກຂອງແຜນການຄຸ້ມຄອງ 6.000 ປີ: ການໃຫ້ທຸກຄົນຮູ້ຈັກຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າ, ໃນທາງປະຕິບັດແມ່ນໃຫ້ພວກເຂົາຮູ້ຈັກວ່າ ພຣະເຈົ້າກາຍເປັນເນື້ອໜັງ ເຊິ່ງໝາຍເຖິງການກະທຳຂອງພຣະເຈົ້າໃນເນື້ອໜັງ ເພື່ອວ່າ ພວກເຂົາຈະປະຕິເສດພຣະເຈົ້າທີ່ເລື່ອນລອຍ ແລະ ຮູ້ຈັກພຣະເຈົ້າໃນປັດຈຸບັນ ແລະ ຍັງເປັນພຣະເຈົ້າໃນອະດີດ ແລະ ຍິ່ງໄປກວ່ານັ້ນ ຍັງເປັນພຣະເຈົ້າໃນອະນາຄົດ ຜູ້ທີ່ມີຄວາມເປັນຢູ່ຢ່າງແທ້ຈິງ ແລະ ຕາມຄວາມເປັນຈິງຈາກນິດນິລັນເຖິງນິລັນດອນ. ພຽງເມື່ອນັ້ນ ພຣະເຈົ້າຈຶ່ງຈະເຂົ້າສູ່ການພັກຜ່ອນ!

# ບົດທີ 4

ເພື່ອຢຸດທຸກຄົນຈາກການອວດດີ ແລະ ຕື່ນເຕັ້ນຈົນລືມໂຕ ຫຼັງຈາກການປ່ຽນແປງສະພາບຂອງພວກເຂົາຈາກລົບເປັນບວກ, ໃນບົດສຸດທ້າຍຂອງພຣະວັດຈະນະຂອງພຣະເຈົ້າ, ເມື່ອພຣະເຈົ້າໄດ້ກ່າວຄວາມຕ້ອງການສູງສຸດຂອງພຣະອົງທີ່ມີຕໍ່ປະຊາຊົນຂອງພຣະອົງ ເຊິ່ງກໍຄື ເມື່ອພຣະເຈົ້າໄດ້ບອກຜູ້ຄົນກ່ຽວກັບຄວາມປະສົງຂອງພຣະອົງ ໃນຂັ້ນຕອນແຫ່ງແຜນການຄຸ້ມຄອງຂອງພຣະອົງ, ພຣະອົງແມ່ນໄດ້ມອບໂອກາດໃຫ້ພວກເຂົາໄຕ່ຕອງພຣະທຳຂອງພຣະອົງ ເພື່ອຊ່ວຍໃຫ້ພວກເຂົາຕັດສິນໃຈ ເພື່ອຕອບສະໜອງຄວາມປະສົງຂອງພຣະເຈົ້າໃນເວລາສຸດທ້າຍ. ເມື່ອສະພາບການຂອງຜູ້ຄົນເປັນບວກ, ພຣະເຈົ້າກໍຈະເລີ່ມຖາມພວກເຂົາ ກ່ຽວກັບອີກດ້ານໜຶ່ງຂອງບັນຫາທັນທີ. ພຣະອົງຖາມຄຳຖາມຕ່າງໆທີ່ເຮັດໃຫ້ຜູ້ຄົນຍາກທີ່ຈະຄິດຫາຄຳຕອບໄດ້: "ຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາແມ່ນມີຮອຍດ່າງຈາກຄວາມບໍ່ບໍລິສຸດບໍ? ຄວາມຈົງຮັກພັກດີຂອງເຈົ້າທີ່ມີຕໍ່ເຮົາບໍລິສຸດ ແລະ ດ້ວຍຄວາມເຕັມໃຈບໍ? ຄວາມຮູ້ຂອງເຈົ້າກ່ຽວກັບເຮົາແມ່ນແທ້ຈິງບໍ? ເຮົາມີຈັກຫ້ອງຢູ່ໃນຫົວໃຈຂອງພວກເຈົ້າ?" ແລະ ອື່ນໆ. ໃນເຄິ່ງທຳອິດຂອງວັກນີ້, ຍົກເວັ້ນການຕຳນິສອງຂໍ້ ນອກນັ້ນມີຄຳຖາມທັງໝົດ. ໂດຍສະເພາະໜຶ່ງຄຳຖາມກໍຄື "ພຣະວັດຈະນະຂອງເຮົາໄດ້ຕີຖືກຈຸດອ່ອນຂອງພວກເຈົ້າຢູ່ບໍ?" ແມ່ນຄຳຖາມທີ່ເໝາະສົມທີ່ສຸດ. ມັນເຈາະຖືກສິ່ງທີ່ເປັນຄວາມລັບທີ່ສຸດໃນສ່ວນເລິກຂອງຫົວໃຈຂອງຜູ້ຄົນຢ່າງແທ້ຈິງ ໂດຍເຮັດໃຫ້ພວກເຂົາຖາມຕົວເອງໂດຍບໍ່ຮູ້ສຶກຕົວວ່າ: "ເຮົາຈົງຮັກພັກດີໃນຄວາມຮັກຂອງເຮົາທີ່ມີຕໍ່ພຣະເຈົ້າຢ່າງແທ້ຈິງບໍ?" ໃນໃຈຂອງພວກເຂົາແລ້ວ, ຜູ້ຄົນແມ່ນນຶກເຖິງປະສົບການໃນອະດີດຂອງພວກເຂົາໃນການຮັບໃຊ້ຢ່າງບໍ່ຮູ້ສຶກຕົວ: ພວກເຂົາຖືກຄອບງຳໂດຍການໃຫ້ອະໄພຕົວເອງ, ການຄິດວ່າຕົວເອງເປັນຝ່າຍຖືກ, ການເຫັນຕົວເອງສຳຄັນ, ການເຮັດໃຫ້ຕົວເອງພໍໃຈ, ການພໍໃຈໃນຕົວເອງ ແລະ ຄວາມພາກພູມໃຈ. ພວກເຂົາເປັນຄືກັບປາໂຕໃຫຍ່ທີ່ຖືກຕິດຢູ່ໃນແຫຫຼັງຈາກຕົກເຂົ້າໄປຢູ່ໃນແຫ, ມັນກໍບໍ່ງ່າຍສຳລັບພວກເຂົາທີ່ຈະເຮັດໃຫ້ຕົວເອງເປັນອິດສະຫຼະໄດ້. ນອກຈາກນັ້ນ, ພວກເຂົາກໍບໍ່ໄດ້ຖືກຈຳກັດເປັນປະຈຳ, ພວກເຂົາມັກຫຼອກລວງຄວາມເປັນມະນຸດປົກກະຕິຂອງພຣະເຈົ້າ ແລະ ພວກເຂົາເຮັດໃຫ້ຕົວເອງໄດ້ທີໜຶ່ງໃນທຸກສິ່ງທີ່ພວກເຂົາເຮັດ. ກ່ອນຈະຖືກເອີ້ນວ່າເປັນ "ຜູ້ເຮັດການບໍລິການ" ພວກເຂົາແມ່ນຄ້າຍຄືກັບລູກເສືອທີ່ເກີດໃໝ່ ທີ່ເຕັມໄປດ້ວຍກຳລັງ. ເຖິງແມ່ນວ່າ ພວກເຂົາຈະສຸມຄວາມສົນໃຈຂອງພວກເຂົາໃສ່ກັບຊີວິດໃນລະດັບໜຶ່ງ ແຕ່ບາງຄັ້ງພວກເຂົາກໍເຮັດຢ່າງບໍ່ໄດ້ຕັ້ງໃຈ; ຄ້າຍຄືກັບຂ້າທາດ, ພວກເຂົາປະຕິບັດຕໍ່ພຣະເຈົ້າພໍເປັນພິທີ. ໃນຊ່ວງໄລຍະທີ່ຖືກເປີດເຜີຍໃນຖານະຜູ້ເຮັດການບໍລິການ, ພວກເຂົາມີຄວາມຄິດລົບ, ພວກເຂົາຕົກຢູ່ຂ້າງຫຼັງ, ພວກເຂົາເຕັມໄປດ້ວຍຄວາມໂສກເສົ້າ, ພວກເຂົາຈົ່ມກ່ຽວກັບພຣະເຈົ້າ, ພວກເຂົາເຮັດຄໍຕົກດ້ວຍຄວາມຜິດຫວັງ ແລະ ອື່ນໆ. ແຕ່ລະຂັ້ນຕອນຂອງເລື່ອງຕ່າງໆຂອງພວກເຂົາເອງທີ່ວິເສດ ແລະ ປະທັບໃຈແມ່ນຍັງເຫຼືອຢູ່ໃນຈິດໃຈຂອງພວກເຂົາ. ມັນຍິ່ງຍາກທີ່ພວກເຂົາຈະນອນ ແລະ ພວກເຂົາແມ່ນໃຊ້ເວລາໃນກາງເວັນດ້ວຍຄວາມມຶດມົວ. ເບິ່ງຄືວ່າ ພວກເຂົາຖືກພຣະເຈົ້າກຳຈັດເປັນຄັ້ງທີສອງ ເນື່ອງຈາກໄດ້ຕົກລົງໄປໃນ

ແດນມໍລະນາ, ບໍ່ສາມາດໜີອອກມາໄດ້. ເຖິງວ່າ ພຣະເຈົ້າບໍ່ໄດ້ເຮັດຫຍັງ ນອກເໜືອຈາກຕັ້ງຄໍາຖາມຍາກໆບາງຂໍ້ໃນວັກທໍາອິດ ແຕ່ຈົ່ງອ່ານຢ່າງຖີ່ຖ້ວນ, ສິ່ງເຫຼົ່ານັ້ນຈະສະແດງໃຫ້ເຫັນວ່າ ເປົ້າໝາຍຂອງພຣະເຈົ້າແມ່ນມີຫຼາຍກວ່າການຖາມຄໍາຖາມເຫຼົ່ານີ້ເພື່ອທີ່ຈະໄດ້ຖາມເທົ່ານັ້ນ; ສິ່ງເຫຼົ່ານັ້ນແມ່ນມີຄວາມໝາຍຢ່າງເລິກເຊິ່ງ ແລະ ຈໍາເປັນຕ້ອງໄດ້ຖືກອະທິບາຍຢ່າງລະອຽດຫຼາຍ.

ເປັນຫຍັງຄັ້ງໜຶ່ງພຣະເຈົ້າຈຶ່ງເວົ້າວ່າ ຄວາມຈິງແລ້ວ ປັດຈຸບັນກໍຄືປັດຈຸບັນ ແລະ ໃນເມື່ອມື້ວານນີ້ແມ່ນໄດ້ຜ່ານພົ້ນໄປແລ້ວ ມັນກໍບໍ່ຈໍາເປັນທີ່ຈະຄິດເຖິງຄວາມຫຼັງ, ແຕ່ວ່າປະໂຫຍກທໍາອິດໃນນີ້ພຣະອົງພັດຕັ້ງຄໍາຖາມກັບຜູ້ຄົນ ແລະ ເຮັດໃຫ້ພວກເຂົາຄິດເຖິງອະດີດ? ໃຫ້ຄິດກ່ຽວກັບມັນເບິ່ງ: ເປັນຫຍັງພຣະເຈົ້າຈຶ່ງຮຽກຮ້ອງບໍ່ໃຫ້ຜູ້ຄົນຍຶດຕິດຢູ່ກັບອະດີດ ແຕ່ຍັງໃຫ້ພວກເຂົາຄິດເຖິງອະດີດ? ພຣະທໍາຂອງພຣະເຈົ້າຈະຜິດໄດ້ບໍ? ແຫຼ່ງທີ່ມາຂອງພຣະທໍາເຫຼົ່ານີ້ຈະຜິດໄດ້ບໍ? ໂດຍທໍາມະຊາດແລ້ວ, ຜູ້ທີ່ບໍ່ສົນໃຈພຣະທໍາຂອງພຣະເຈົ້າຈະບໍ່ຖາມຄໍາຖາມທີ່ເລິກເຊິ່ງ. ແຕ່ໃນໄລຍະໜຶ່ງ ກໍບໍ່ຈໍາເປັນທີ່ຈະເວົ້າເຖິງສິ່ງນີ້. ກ່ອນອື່ນໝົດ, ຂໍໃຫ້ເຮົາອະທິບາຍຄໍາຖາມທໍາອິດທີ່ວ່າ “ເປັນຫຍັງ” ທີ່ຢູ່ຂ້າງເທິງກ່ອນ. ແນ່ນອນຢູ່ແລ້ວທີ່ທຸກຄົນຮູ້ວ່າ ພຣະເຈົ້າໄດ້ເວົ້າວ່າ ພຣະອົງບໍ່ກ່າວພຣະທໍາທີ່ໄຮ້ປະໂຫຍດ. ຖ້າພຣະທໍາຖືກກ່າວອອກຈາກປາກຂອງພຣະເຈົ້າ, ກໍຈະມີເປົ້າໝາຍ ແລະ ມີຄວາມໝາຍສໍາລັບພຣະທໍາເຫຼົ່ານັ້ນທີ່ເຈາະຈົງເຖິງແກ່ນແທ້ຂອງຄໍາຖາມ. ຄວາມລົ້ມເຫຼວທີ່ຮ້າຍແຮງທີ່ສຸດຂອງຜູ້ຄົນແມ່ນຄວາມບໍ່ສາມາດຂອງພວກເຂົາ ໃນການປ່ຽນແປງວິທີທາງທີ່ຊົ່ວຮ້າຍຂອງພວກເຂົາ ແລະ ທໍາມະຊາດເກົ່າຂອງພວກເຂົາທີ່ຍາກທີ່ຈະແກ້ໄຂໄດ້. ເພື່ອອະນຸຍາດໃຫ້ທຸກຄົນຮູ້ຈັກຕົນເອງຢ່າງລະອຽດ ແລະ ຕາມຄວາມເປັນຈິງ, ກ່ອນອື່ນໝົດ ພຣະເຈົ້າຈະນໍາພາພວກເຂົາໃນການຄິດທວນຄືນຫຼັງເຖິງອະດີດ ເພື່ອວ່າ ພວກເຂົາຈະສາມາດສະທ້ອນເບິ່ງຕົວເອງຢ່າງເລິກເຊິ່ງ ແລະ ດ້ວຍເຫດນັ້ນ ກໍຈະຮູ້ຈັກວ່າ ພຣະທໍາຂອງພຣະເຈົ້າແມ່ນບໍ່ເປົ່າວ່າງແມ່ນແຕ່ຂໍ້ດຽວ ແລະ ພຣະທໍາຂອງພຣະເຈົ້າທັງໝົດແມ່ນຖືກເຕີມເຕັມໃນຜູ້ຄົນທີ່ແຕກຕ່າງກັນ. ໃນອະດີດ, ວິທີທີ່ພຣະເຈົ້າໃຊ້ຈັດການກັບຜູ້ຄົນ ແມ່ນເຮັດໃຫ້ພວກເຂົາມີຄວາມຮູ້ກ່ຽວກັບພຣະເຈົ້າໜ້ອຍໜຶ່ງ ແລະ ເຮັດໃຫ້ຄວາມຈິງໃຈຂອງພວກເຂົາທີ່ມີຕໍ່ພຣະເຈົ້າຈິງໃຈຂຶ້ນໜ້ອຍໜຶ່ງ. ຄໍາທີ່ວ່າ “ພຣະເຈົ້າ” ແມ່ນຄອບຄອງແຕ່ 0.1 ເປີເຊັນຂອງຜູ້ຄົນ ແລະ ຂອງຫົວໃຈຂອງພວກເຂົາ. ການບັນລຸຜົນໄດ້ເຖິງຂະໜາດນີ້ສະແດງໃຫ້ເຫັນວ່າ ພຣະເຈົ້າໄດ້ດໍາເນີນການຊ່ວຍເຫຼືອໃຫ້ລອດພົ້ນໃນຈໍານວນຢ່າງມະຫາສານ. ມັນຍຸຕິທໍາແລ້ວທີ່ຈະເວົ້າວ່າ ຜົນສໍາເລັດຂອງພຣະເຈົ້າໃນກຸ່ມຄົນດັ່ງກ່າວນີ້ຢ່າງໃຫຍ່ຫຼວງ ເຊິ່ງເປັນກຸ່ມທີ່ຖືກມັງກອນແດງທີ່ຍິ່ງໃຫຍ່ຂູດຮີດ ແລະ ຖືກຊາຕານຄອບງໍາເຖິງຂັ້ນທີ່ພວກເຂົາບໍ່ກ້າພຽງແຕ່ຈະເຮັດໃນສິ່ງທີ່ພວກເຂົາພໍໃຈ. ນັ້ນກໍຍ້ອນວ່າ ມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະຄອບຄອງໃຈຂອງຜູ້ຄົນທີ່ຖືກຊາຕານຄອບງໍາຢ່າງຮ້ອຍເປີເຊັນ. ເພື່ອເພີ່ມຄວາມຮູ້ຂອງຜູ້ຄົນກ່ຽວກັບພຣະເຈົ້າໃນໄລຍະຂັ້ນຕອນຕໍ່ໄປ, ພຣະເຈົ້າແມ່ນໄດ້ສົມທຽບສະພາບການຕ່າງໆຂອງຜູ້ເຮັດການບໍລິການໃນອະດີດກັບປະຊາຊົນຂອງພຣະເຈົ້າໃນປັດຈຸບັນ ເຊິ່ງດ້ວຍເຫດນັ້ນ ກໍເປັນການສ້າງຄວາມແຕກຕ່າງຢ່າງຈະແຈ້ງ ທີ່ເຮັດໃຫ້ຜູ້ຄົນຮູ້ສຶກອັບອາຍຍິ່ງຂຶ້ນ. ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ “ບໍ່ມີບ່ອນເຊື່ອງຄວາມອັບອາຍຂອງຕົວ”.

ດັ່ງນັ້ນ, ເປັນຫຍັງເຮົາຈຶ່ງເວົ້າວ່າ ພຣະເຈົ້າບໍ່ພຽງແຕ່ຖາມຄຳຖາມເພື່ອທີ່ຈະໄດ້ຖາມພວກມັນ? ການອ່ານຢ່າງລະອຽດແຕ່ຕົ້ນຈົນຈົບຈະສະແດງໃຫ້ເຫັນວ່າ ເຖິງແມ່ນວ່າຄຳຖາມຕ່າງໆທີ່ຕັ້ງຂຶ້ນໂດຍພຣະເຈົ້າບໍ່ໄດ້ອະທິບາຍຢ່າງທົ່ວເຖິງ ແຕ່ທຸກຄຳຖາມເຫຼົ່ານັ້ນແມ່ນໝາຍເຖິງຂອບເຂດຂອງຄວາມຈົງຮັກພັກດີຂອງຜູ້ຄົນທີ່ມີຕໍ່ພຣະເຈົ້າ ແລະ ຄວາມຮູ້ກ່ຽວກັບພຣະເຈົ້າ; ເວົ້າອີກຢ່າງໜຶ່ງກໍຄື ຄຳຖາມເຫຼົ່ານັ້ນໝາຍເຖິງສະພາບຕົວຈິງຂອງຜູ້ຄົນ ທີ່ເປັນຕາເວດທະນາ ແລະ ຍາກທີ່ພວກເຂົາຈະເປີດອອກໄດ້. ຈາກສິ່ງນີ້ ແມ່ນສາມາດເຫັນໄດ້ວ່າ ວຸດທິພາວະຂອງຜູ້ຄົນແມ່ນມີຕໍ່າຫຼາຍ, ຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າແມ່ນເບົາບາງຫຼາຍ ແລະ ຄວາມຈົງຮັກພັກດີຂອງພວກເຂົາທີ່ມີຕໍ່ພຣະອົງກໍມີມົນທິນ ແລະ ບໍ່ບໍລິສຸດເຊັ່ນກັນ. ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ ເກືອບທຸກຄົນຕົກເບັດຢູ່ນໍ້າຂຸ່ນ ແລະ ຢູ່ບ່ອນນັ້ນເພື່ອໃຫ້ໄດ້ຄົບຈຳນວນຄົນເທົ່ານັ້ນ. ເມື່ອພຣະເຈົ້າເວົ້າວ່າ "ພວກເຈົ້າເຊື່ອວ່າ ພວກເຈົ້າບໍ່ມີຄຸນສົມບັດເປັນປະຊາຊົນຂອງເຮົາແທ້ບໍ?" ຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ກໍຄື ໃນທ່າມກາງທຸກຄົນແມ່ນບໍ່ມີໃຜທີ່ເໝາະສົມທີ່ຈະເປັນຄົນຂອງພຣະເຈົ້າ. ແຕ່ເພື່ອໃຫ້ບັນລຸຜົນທີ່ຍິ່ງໃຫຍ່ກວ່າ, ພຣະເຈົ້າແມ່ນໄດ້ໃຊ້ວິທີການຕັ້ງຄຳຖາມ. ວິທີການນີ້ແມ່ນໄດ້ຜົນດີຫຼາຍກວ່າພຣະທຳໃນອະດີດ ທີ່ໂຈມຕີ, ຟັນ ແລະ ຂ້າຜູ້ຄົນຢ່າງບໍ່ມີຄວາມປານີ ຈົນເຖິງຂັ້ນແທງຫົວໃຈຂອງພວກເຂົາ. ສົມມຸດພຣະເຈົ້າໄດ້ເວົ້າບາງຢ່າງທີ່ບໍ່ມ່ວນ ແລະ ບໍ່ເປັນຕາສົນໃຈໂດຍກົງເຊັ່ນ "ພວກເຈົ້າບໍ່ຈົງຮັກພັກດີຕໍ່ເຮົາ ແລະ ຄວາມຈົງຮັກພັກດີຂອງພວກເຈົ້າແມ່ນມີມົນທິນ ແລະ ເຮົາບໍ່ມີຫ້ອງທີ່ແນ່ນອນໃນຫົວໃຈຂອງພວກເຈົ້າ... ເຮົາຈະບໍ່ຈັ່ງບ່ອນໄວ້ໃຫ້ພວກເຈົ້າລົ້ຈາກຕົວພວກເຈົ້າເອງ ເນື່ອງຈາກວ່າ ບໍ່ມີຜູ້ໃດໃນບັນດາພວກເຈົ້າມີຄ່າພໍທີ່ຈະເປັນປະຊາຊົນຂອງເຮົາ". ພວກເຈົ້າອາດຈະປຽບທຽບທັງສອງຢ່າງ ແລະ ເນື້ອຫາຂອງພວກມັນແມ່ນຄືກັນ, ນໍ້າສຽງຂອງແຕ່ລະອັນແມ່ນແຕກຕ່າງກັນ. ການນຳໃຊ້ຄຳຖາມແມ່ນມີປະສິດທິພາບຫຼາຍກວ່າ. ສະນັ້ນ, ພຣະເຈົ້າທີ່ມີສະຕິປັນຍາເປັນເລີດຈຶ່ງໄດ້ໃຊ້ນໍ້າສຽງທຳອິດ ເຊິ່ງສະແດງໃຫ້ເຫັນຄວາມສາມາດທາງດ້ານສິລະປະໃນການເວົ້າຂອງພຣະອົງ. ມະນຸດບໍ່ສາມາດບັນລຸສິ່ງນີ້ໄດ້ ແລະ ຈຶ່ງບໍ່ເປັນທີ່ແປກໃຈທີ່ພຣະເຈົ້າຈະກ່າວວ່າ "ຜູ້ຄົນເປັນພຽງແຕ່ເຄື່ອງໃຊ້ທີ່ເຮົາໃຊ້. ສິ່ງດຽວທີ່ແຕກຕ່າງລະຫວ່າງສິ່ງເຫຼົ່ານັ້ນກໍຄື ບາງຢ່າງແມ່ນຕໍ່າຕ້ອຍ ແລະ ບາງຢ່າງແມ່ນມີຄ່າ".

ໃນຂະນະທີ່ຜູ້ຄົນສືບຕໍ່ອ່ານ, ພຣະທຳຂອງພຣະເຈົ້າມີຈຳນວນຫຼາຍ ແລະ ເພີ່ມຂຶ້ນຢ່າງວ່ອງໄວໂດຍບໍ່ຄ່ອຍໃຫ້ໂອກາດແກ່ພວກເຂົາໄດ້ຫາຍໃຈ ເນື່ອງຈາກວ່າ ພຣະເຈົ້າບໍ່ໄດ້ສ້າງຄວາມສະບາຍໃຫ້ກັບມະນຸດ. ເມື່ອຜູ້ຄົນຮູ້ສຶກເສຍໃຈທີ່ສຸດ ພຣະເຈົ້າກໍເຕືອນພວກເຂົາອີກຄັ້ງວ່າ: "ຖ້າພວກເຈົ້າບໍ່ສົນໃຈຕໍ່ຄຳຖາມຂ້າງເທິງ, ແລ້ວນີ້ກໍສະແດງໃຫ້ເຫັນວ່າ ພວກເຈົ້າກຳລັງຕົກເບັດຢູ່ນໍ້າຂຸ່ນ, ພວກເຈົ້າພຽງມີຢູ່ເພື່ອເພີ່ມຈຳນວນຄົນເທົ່ານັ້ນ ແລະ ເມື່ອເຖິງເວລາທີ່ເຮົາກຳນົດລ່ວງໜ້າ ພວກເຈົ້າກໍຈະຖືກໂຍນອອກ ແລະ ຖືກຖິ້ມລົງໃນຂຸມເລິກທີ່ສຸດເປັນຄັ້ງທີ່ສອງຢ່າງແນ່ນອນ. ສິ່ງເຫຼົ່ານີ້ແມ່ນພຣະທຳແຫ່ງການຕັກເຕືອນຂອງເຮົາ ແລະ ຜູ້ໃດທີ່ຖືເບົາກັບພຣະທຳເຫຼົ່ານີ້ຈະຖືກໂຈມຕີດ້ວຍການພິພາກສາຂອງເຮົາ ແລະ ຜະເຊີນດ້ວຍໄພພິບັດຕາມເວລາທີ່ໄດ້ກຳນົດໄວ້". ໃນການອ່ານພຣະທຳດັ່ງກ່າວ ຜູ້ຄົນບໍ່ສາມາດເຮັດຫຍັງໄດ້ ນອກຈາກຄິດເຖິງເວລາທີ່ພວກເຂົາຖືກຖິ້ມລົງໃນຂຸມທີ່ເລິກທີ່ສຸດ: ເນື່ອງຈາກ

ຖືກຂົ່ມຂູ່ຈາກໄພພິບັດ, ຖືກປົກຄອງໂດຍບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າ, ຈຸດຈົບຂອງພວກເຂົາແມ່ນລໍຖ້າພວກເຂົາ, ພວກເຂົາຮູ້ສຶກໂສກເສົ້າເປັນເວລາດົນນານ, ເສົ້າໃຈ, ກັງວົນໃຈ ແລະ ບໍ່ສາມາດເວົ້າກ່ຽວກັບຄວາມທຸກທໍລະມານທີ່ຢູ່ພາຍໃນໃຈຂອງພວກເຂົາໃຫ້ຜູ້ໃດຟັງ. ເມື່ອປຽບທຽບກັບສິ່ງນີ້ແລ້ວ, ພວກເຂົາຮູ້ສຶກວ່າມັນຈະດີກວ່າທີ່ເນື້ອໜັງຂອງພວກເຂົາຖືກກໍາຈັດໄປ... ເມື່ອຄວາມຄິດຂອງພວກເຂົາຮອດຈຸດນີ້ ພວກເຂົາກໍບໍ່ສາມາດເຮັດຫຍັງໄດ້ ນອກຈາກຮູ້ສຶກເສົ້າໃຈ. ເມື່ອຄິດເຖິງສິ່ງທີ່ພວກເຂົາເຄີຍເປັນໃນອະດີດ, ສິ່ງທີ່ພວກເຂົາເປັນໃນປັດຈຸບັນ ແລະ ພວກເຂົາຈະເປັນແນວໃດໃນອະນາຄົດ, ຄວາມໂສກເສົ້າກໍເພີ່ມຂຶ້ນໃນໃຈຂອງພວກເຂົາ, ພວກເຂົາເລີ່ມສັ່ນດ້ວຍຄວາມຢ້ານແບບບໍ່ຮູ້ສຶກຕົວ ແລະ ດ້ວຍເຫດນັ້ນ ພວກເຂົາກໍຢໍາເກງພຣະບັນຍັດແຫ່ງການບໍລິຫານຂອງພຣະເຈົ້າຫຼາຍຂຶ້ນ. ແຕ່ໃນຂະນະທີ່ພວກເຂົາຮູ້ວ່າ ຄໍາສັບທີ່ວ່າ “ປະຊາຊົນຂອງພຣະເຈົ້າ” ຍັງອາດຈະພຽງແຕ່ໝາຍເຖິງການເວົ້າ, ການຮ້ອງໂຮ່ດີໃຈຂອງພວກເຂົາ ກໍກາຍເປັນຄວາມເສົ້າໂສກເສຍໃຈທັນທີ. ພຣະເຈົ້າໄດ້ໃຊ້ຄວາມອ່ອນແອຂອງພວກເຂົາເພື່ອໂຈມຕີພວກເຂົາ ແລະ ໃນຈຸດນີ້ ພຣະອົງກໍເລີ່ມຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງ, ເຮັດໃຫ້ຈິດໃຈຂອງຜູ້ຄົນຖືກກະຕຸ້ນຢ່າງຕໍ່ເນື່ອງ ແລະ ເພີ່ມຄວາມຮູ້ສຶກໃຫ້ແກ່ພວກເຂົາ ໃຫ້ພວກເຂົາຮູ້ສຶກວ່າ ພວກເຂົາບໍ່ສາມາດຢັ່ງເຖິງການກະທໍາຂອງພຣະເຈົ້າໄດ້, ບໍ່ສາມາດເອື້ອມເຖິງພຣະເຈົ້າ, ພຣະເຈົ້າສັກສິດ ແລະ ບໍລິສຸດ ແລະ ພວກເຂົາບໍ່ຄູ່ຄວນທີ່ຈະເປັນປະຊາຊົນຂອງພຣະເຈົ້າ. ດ້ວຍເຫດນີ້, ພວກເຂົາຈຶ່ງເພີ່ມທະວີຄູນຄວາມພະຍາຍາມຂອງພວກເຂົາ ເພື່ອປັບປຸງຕົວເອງ ແລະ ບໍ່ກ້າທີ່ຈະເປັນຄົນຍ່າງຕາມຫຼັງອີກຕໍ່ໄປ.

ຕໍ່ໄປກໍຄື ການສອນບົດຮຽນໃຫ້ແກ່ຜູ້ຄົນ ແລະ ເພື່ອເຮັດໃຫ້ພວກເຂົາຮູ້ຈັກຕົວເອງ, ເຄົາລົບບູຊາພຣະເຈົ້າ ແລະ ຢໍາເກງພຣະເຈົ້າ, ພຣະເຈົ້າຈຶ່ງເລີ່ມແຜນການໃໝ່ຂອງພຣະອົງ: “ຕັ້ງແຕ່ເວລາຂອງການຊົງສ້າງຈົນເຖິງປັດຈຸບັນ, ຫຼາຍຄົນບໍ່ໄດ້ເຊື່ອຟັງພຣະທໍາຂອງເຮົາ ແລະ ດ້ວຍເຫດນັ້ນ ຈຶ່ງຖືກຂັບໄລ່ ແລະ ໂຍນອອກຈາກກະແສຂອງການຟື້ນຟູຂອງເຮົາ; ໃນທີ່ສຸດ ຮ່າງກາຍຂອງພວກເຂົາກໍຈະດັບສູນ ແລະ ວິນຍານຂອງພວກເຂົາກໍຈະຖືກສົ່ງໄປຍັງແດນມໍລະນາ ແລະ ແມ່ນແຕ່ໃນປັດຈຸບັນພວກເຂົາກໍຍັງຈະຢູ່ພາຍໃຕ້ການລົງໂທດຢ່າງທຸກທໍລະມານ. ຫຼາຍຄົນໄດ້ຕິດຕາມພຣະທໍາຂອງເຮົາແຕ່ພວກເຂົາໄດ້ຕໍ່ຕ້ານແສງສະຫວ່າງ ແລະ ແສງເຍືອງທາງຂອງເຮົາ... ແລະ ບາງຄົນກໍ...” ສິ່ງເຫຼົ່ານີ້ແມ່ນຕົວຢ່າງແທ້ຈິງ. ໃນພຣະທໍາເຫຼົ່ານີ້, ພຣະເຈົ້າບໍ່ພຽງແຕ່ຕັກເຕືອນຢ່າງແທ້ຈິງແກ່ປະຊາຊົນຂອງພຣະເຈົ້າເທົ່ານັ້ນ ເພື່ອເຮັດໃຫ້ພວກເຂົາຮູ້ຈັກການກະທໍາຂອງພຣະເຈົ້າຕະຫຼອດຍຸກຕ່າງໆ ແຕ່ຍັງໃຫ້ຄໍາອະທິບາຍແບບອ້ອມຄ້ອມໃນບາງສ່ວນທີ່ກໍາລັງເກີດຂຶ້ນທາງໂລກວິນຍານ. ສິ່ງນີ້ເຮັດໃຫ້ຜູ້ຄົນຮູ້ຈັກວ່າ ບໍ່ມີຫຍັງດີທີ່ສາມາດອອກມາຈາກຄວາມບໍ່ເຊື່ອຟັງຂອງພວກເຂົາທີ່ມີຕໍ່ພຣະເຈົ້າ. ສິ່ງເຫຼົ່ານັ້ນຈະກາຍເປັນຮອຍແປ້ວແຫ່ງຄວາມອັບອາຍຕະຫຼອດການ ແລະ ສິ່ງເຫຼົ່ານັ້ນຈະກາຍເປັນຕົວຕົນຂອງຊາຕານ ແລະ ຕົວຢ່າງຂອງຊາຕານ. ໃນໃຈຂອງພຣະເຈົ້າ, ຄວາມໝາຍໃນດ້ານນີ້ ແມ່ນມີຄວາມສໍາຄັນອັນດັບສອງ ເນື່ອງຈາກພຣະທໍາເຫຼົ່ານີ້ໄດ້ເຮັດໃຫ້ຜູ້ຄົນສັ່ນ ແລະ ເຮັດຫຍັງບໍ່ຖືກ. ດ້ານດີຂອງສິ່ງນີ້ກໍຄືໃນຂະນະທີ່ຜູ້ຄົນສັ່ນດ້ວຍຄວາມຢ້ານກົວ ພວກເຂົາຍັງໄດ້ເຂົ້າໃຈລາຍລະອຽດບາງຢ່າງກ່ຽວກັບໂລກ

ວິນຍານ ແຕ່ມີແຕ່ບາງຢ່າງເທົ່ານັ້ນ ສະນັ້ນ ເຮົາຈຶ່ງຕ້ອງໄດ້ອະທິບາຍເພີ່ມເຕີມເລັກນ້ອຍ. ຈາກປະຕູໂຂງຂອງໂລກວິນຍານແມ່ນສາມາດເຫັນໄດ້ວ່າ ມີວິນຍານທຸກປະເພດ. ຢ່າງໃດກໍຕາມ, ບາງຄົນແມ່ນຢູ່ແດນມໍລະນາ, ບາງຄົນຢູ່ນະຣົກ, ບາງຄົນຢູ່ໃນທະເລສາບໄຟ ແລະ ບາງຄົນຢູ່ໃນຂຸມທີ່ເລິກທີ່ສຸດ. ເຮົາມີບາງຢ່າງທີ່ຢາກຈະເພີ່ມໃນນີ້. ເວົ້າແບບຜິວເຜີນກໍຄື ວິນຍານເຫຼົ່ານີ້ສາມາດຖືກແບ່ງອອກຕາມສະຖານທີ່ຂອງມັນ; ແຕ່ຢ່າງໃດກໍຕາມ, ຖ້າເວົ້າໂດຍສະເພາະກໍຄື ບາງຄົນແມ່ນຖືກຈັດການໂດຍການຂ້ຽນຕີຂອງພຣະເຈົ້າໂດຍກົງ ແລະ ບາງຄົນແມ່ນຢູ່ເປັນທາດໃຫ້ແກ່ຊາຕານ ເຊິ່ງພຣະເຈົ້າໃຊ້. ເວົ້າໃຫ້ຊັດເຈນກວ່ານີ້ກໍຄື ການຂ້ຽນຕີຂອງພວກເຂົາແມ່ນແຕກຕ່າງກັນ ແລະ ອີງຕາມຄວາມຮຸນແຮງຂອງສະຖານະການຂອງພວກເຂົາ. ໃນຈຸດນີ້, ເຮົາຂໍອະທິບາຍເພີ່ມເຕີມອີກເລັກນ້ອຍ. ຜູ້ທີ່ຖືກຂ້ຽນຕີໂດຍກົງໂດຍມືຂອງພຣະເຈົ້າແມ່ນບໍ່ມີວິນຍານຢູ່ເທິງແຜ່ນດິນໂລກ ເຊິ່ງໝາຍຄວາມວ່າ ພວກເຂົາບໍ່ມີໂອກາດທີ່ຈະເກີດໃໝ່. ວິນຍານຕ່າງໆທີ່ຢູ່ພາຍໃຕ້ອຳນາດຂອງຊາຕານ ກໍຄືສັດຕູທີ່ພຣະເຈົ້າກ່າວເຖິງເມື່ອພຣະອົງເວົ້າວ່າ "ກາຍເປັນສັດຕູຂອງເຮົາ" ແມ່ນຕິດພັນກັບເລື່ອງຂອງແຜ່ນດິນໂລກ. ວິນຍານຮ້າຍທັງຫຼາຍທີ່ຢູ່ແຜ່ນດິນໂລກລ້ວນແລ້ວແຕ່ແມ່ນສັດຕູຂອງພຣະເຈົ້າ, ແມ່ນຜູ້ຮັບໃຊ້ຊາຕານ ແລະເຫດຜົນສຳລັບການເປັນຢູ່ ຂອງພວກເຂົາ ກໍແມ່ນເພື່ອໃຫ້ບໍລິການ, ເພື່ອໃຫ້ບໍລິການເພື່ອຂັດຂວາງການກະທຳຂອງພຣະເຈົ້າ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ "ຜູ້ຄົນເຫຼົ່ານີ້ບໍ່ພຽງແຕ່ຖືກຊາຕານຈັບກຸມຕົວເທົ່ານັ້ນ ແຕ່ໄດ້ກາຍເປັນຄົນບາບຕະຫຼອດການ ແລະ ກາຍເປັນສັດຕູຂອງເຮົາ ແລະ ພວກເຂົາແມ່ນຕໍ່ຕ້ານເຮົາໂດຍກົງ". ຫຼັງຈາກນັ້ນ ພຣະເຈົ້າໄດ້ບອກຜູ້ຄົນກ່ຽວກັບຈຸດຈົບຂອງວິນຍານປະເພດນີ້ວ່າ: "ພວກມັນແມ່ນເປົ້າໝາຍຂອງການພິພາກສາໃນຂັ້ນດຸເດືອດແຫ່ງການໂກດຮ້າຍຂອງເຮົາ". ພຣະເຈົ້າຍັງຊີ້ແຈງສະພາບການໃນປັດຈຸບັນຂອງພວກເຂົາ: "ໃນປັດຈຸບັນ ພວກເຂົາຍັງຕາບອດຢູ່, ຍັງຢູ່ໃນຄຸກມືດໃຕ້ດິນ".

ເພື່ອສະແດງໃຫ້ຜູ້ຄົນເຫັນເຖິງຄວາມຈິງຂອງພຣະທຳຂອງພຣະເຈົ້າ, ພຣະເຈົ້າໄດ້ໃຊ້ຕົວຢ່າງແທ້ເພື່ອເປັນຫຼັກຖານ (ກໍລະນີຂອງໂປໂລທີ່ພຣະອົງກ່າວເຖິງ) ເພື່ອວ່າ ການຕັກເຕືອນຂອງພຣະອົງຈະເຮັດໃຫ້ຜູ້ຄົນປະທັບໃຈຢ່າງເລິກເຊິ່ງ. ເພື່ອຢຸດຜູ້ຄົນຈາກການປະຕິບັດດັ່ງທີ່ໄດ້ກ່າວໄວ້ໃນເລື່ອງຂອງໂປໂລ ແລະ ເພື່ອປ້ອງກັນບໍ່ໃຫ້ພວກເຂົາຄິດວ່າ ພວກເຂົາແມ່ນຜູ້ສັງເກດການ ແລະ ຍິ່ງໄປກວ່ານັ້ນກໍເພື່ອຢຸດພວກເຂົາຈາກການເວົ້າໂອ້ອວດໄປທົ່ວກ່ຽວກັບສິ່ງທີ່ເກີດຂຶ້ນພັນກວ່າປີມາແລ້ວ ທີ່ພວກເຂົາໄດ້ຮຽນຮູ້ຈາກພຣະເຈົ້າ, ພຣະເຈົ້າຈຶ່ງບໍ່ໄດ້ສົນໃຈກັບປະສົບການຂອງໂປໂລຕະຫຼອດຊີວິດຂອງລາວ. ກົງກັນຂ້າມ, ພຣະເຈົ້າສຸມໃສ່ຜົນທີ່ຕາມມາສຳລັບໂປໂລ ແລະ ຈຸດຈົບທີ່ລາວຈະພົບພໍ້, ເຫດຜົນທີ່ວ່າເປັນຫຍັງໂປໂລຈຶ່ງຕໍ່ຕ້ານພຣະເຈົ້າ ແລະ ວິທີການລົງເອີຍຂອງໂປໂລດັ່ງທີ່ລາວໄດ້ລົງເອີຍ. ສິ່ງທີ່ພຣະເຈົ້າສຸມໃສ່ແມ່ນການເນັ້ນເຖິງວິທີທີ່ພຣະອົງປະຕິເສດຄວາມຫວັງແບບເພີ້ຝັນຂອງໂປໂລໃນຕອນສຸດທ້າຍ ແລະ ການເປີດເຜີຍສະພາບຂອງໂປໂລໃນໂລກວິນຍານ: "ໂປໂລຖືກຂ້ຽນຕີໂດຍພຣະເຈົ້າໂດຍກົງ". ຍ້ອນຜູ້ຄົນບໍ່ມີຄວາມຮູ້ສຶກ ແລະ ບໍ່ສາມາດເຂົ້າໃຈພຣະທຳຂອງພຣະເຈົ້າ, ພຣະເຈົ້າຈຶ່ງໄດ້ເພີ່ມຄຳອະທິບາຍ (ພາກຕໍ່ໄປຂອງພຣະວັດຈະນາ) ແລະ ເລີ່ມກ່າວກ່ຽວກັບບັນຫາທີ່ກ່ຽວຂ້ອງກັບ

ດ້ານອື່ນໆ: "ໃຜກໍຕາມທີ່ຕໍ່ຕ້ານເຮົາ (ໂດຍບໍ່ພຽງແຕ່ຕໍ່ຕ້ານຕົວຕົນຂອງເຮົາທີ່ເປັນເນື້ອໜັງເທົ່ານັ້ນ ແຕ່ສຳຄັນໄປກວ່ານັ້ນ ແມ່ນຕໍ່ຕ້ານພຣະທຳ ແລະ ພຣະວິນຍານຂອງເຮົາ ນັ້ນກໍຄື ຄວາມເປັນພຣະເຈົ້າຂອງເຮົາ) ແມ່ນໄດ້ຮັບການພິພາກສາຈາກເຮົາໃນເນື້ອໜັງຂອງພວກເຂົາ". ຖ້າຈະເວົ້າແບບຜິວເຜີນ, ເຖິງແມ່ນວ່າ ພຣະທຳເຫຼົ່ານີ້ຈະເບິ່ງຄືວ່າ ບໍ່ກ່ຽວຂ້ອງກັບສິ່ງທີ່ຢູ່ຂ້າງເທິງ ແລະ ບໍ່ປາກົດວ່າ ມີຄວາມສຳພັນກັນລະຫວ່າງທັງສອງຢ່າງ ກໍຈົ່ງຢ່າຕົກໃຈໄປເລີຍ: ພຣະເຈົ້າມີເປົ້າໝາຍຂອງພຣະອົງເອງ; ພຣະທຳທີ່ທຳມະດາທີ່ວ່າ "ຕົວຢ່າງຂ້າງເທິງພິສູດວ່າ" ແມ່ນໄດ້ຣວມສອງບັນຫາທີ່ບໍ່ກ່ຽວຂ້ອງກັນໃຫ້ເຂົ້າກັນເອງ ເຊິ່ງນີ້ເປັນຄວາມສະຫຼຽວສະຫຼາດຈາກພຣະທຳຂອງພຣະເຈົ້າ. ສະນັ້ນ, ຜູ້ຄົນແມ່ນໄດ້ຮັບແສງສະຫວ່າງຜ່ານເລື່ອງຂອງໂປໂລ ແລະ ຍ້ອນຄວາມຕິດພັນລະຫວ່າງຂໍ້ຄວາມກ່ອນໜ້ານັ້ນ ແລະ ຕໍ່ໄປນີ້, ຜ່ານບົດຮຽນຂອງໂປໂລ, ພວກເຂົາສະແຫວງຫາທີ່ຈະຮູ້ຈັກພຣະເຈົ້າໃຫ້ຫຼາຍຂຶ້ນ, ເຊິ່ງນັ້ນຄືເຫດຜົນທີ່ພຣະເຈົ້າປາດຖະໜາທີ່ຈະບັນລຸໃນການກ່າວພຣະທຳເຫຼົ່ານັ້ນຢ່າງແນ່ນອນ. ຕໍ່ໄປ, ພຣະເຈົ້າຈະກ່າວພຣະທຳບາງຂໍ້ ທີ່ໃຫ້ການຊ່ວຍເຫຼືອ ແລະ ປະທານແສງສະຫວ່າງແຫ່ງການເຂົ້າສູ່ຊີວິດຂອງຜູ້ຄົນ. ເຮົາບໍ່ຈຳເປັນຕ້ອງເວົ້າກ່ຽວກັບສິ່ງນີ້. ເຈົ້າຈະຮູ້ສຶກວ່າ ສິ່ງເຫຼົ່ານັ້ນແມ່ນສິ່ງທີ່ເຂົ້າໃຈງ່າຍ. ຢ່າງໃດກໍຕາມ, ສິ່ງທີ່ເຮົາຕ້ອງອະທິບາຍແມ່ນໃນເວລາທີ່ພຣະເຈົ້າເວົ້າວ່າ "ໃນອະດີດ, ເມື່ອເຮົາປະຕິບັດພາລະກິດໃນຄວາມເປັນມະນຸດທຳມະດາ, ຜູ້ຄົນສ່ວນໃຫຍ່ແມ່ນໄດ້ປະເມີນພວກເຂົາເອງຕໍ່ຄວາມໂກດຮ້າຍ ແລະ ລິດທານຸພາບຂອງເຮົາ ແລະ ໄດ້ຮູ້ຈັກກ່ຽວກັບສະຕິປັນຍາ ແລະ ອຸປະນິໄສຂອງເຮົາເລັກນ້ອຍແລ້ວ. ໃນປັດຈຸບັນ, ເຮົາເວົ້າ ແລະ ກະທຳໃນຄວາມເປັນພຣະເຈົ້າໂດຍກົງ ແລະ ຍັງມີບາງຄົນທີ່ຈະເຫັນຄວາມໂກດຮ້າຍ ແລະ ການພິພາກສາຂອງເຮົາດ້ວຍສາຍຕາຂອງພວກເຂົາເອງ; ຍິ່ງໄປກວ່ານັ້ນ, ພາລະກິດຫຼັກໃນຂັ້ນຕອນທີສອງຂອງຍຸກແຫ່ງການພິພາກສາ ແມ່ນເພື່ອເຮັດໃຫ້ປະຊາຊົນຂອງເຮົາທຸກຄົນຮູ້ຈັກການກະທຳຂອງເຮົາໃນເນື້ອໜັງໂດຍກົງ ແລະ ເພື່ອເຮັດໃຫ້ພວກເຈົ້າທຸກຄົນເຫັນອຸປະນິໄສຂອງເຮົາໂດຍກົງ". ພຣະທຳບາງຂໍ້ເຫຼົ່ານີ້ຈົບສິ້ນພາລະກິດຂອງພຣະເຈົ້າໃນຄວາມເປັນມະນຸດປົກກະຕິ ແລະ ເລີ່ມຂັ້ນຕອນທີສອງຂອງພາລະກິດຂອງພຣະເຈົ້າໃນຍຸກແຫ່ງການພິພາກສາຢ່າງເປັນທາງການ ເຊິ່ງຖືກດຳເນີນໃນຮູບແບບຂອງຄວາມເປັນພຣະເຈົ້າ ແລະ ທຳນາຍລ່ວງໜ້າເຖິງຈຸດຈົບຂອງກຸ່ມຄົນ. ໃນຈຸດນີ້, ມັນເໝາະສົມທີ່ຈະອະທິບາຍວ່າ ພຣະເຈົ້າບໍ່ໄດ້ບອກຜູ້ຄົນວ່າ ນີ້ແມ່ນຂັ້ນຕອນທີ່ສອງຂອງຍຸກແຫ່ງການພິພາກສາ ໃນເວລາທີ່ພວກເຂົາໄດ້ກາຍເປັນປະຊາຊົນຂອງພຣະເຈົ້າ. ກົງກັນຂ້າມ, ພຣະອົງພຽງແຕ່ອະທິບາຍວ່າ ນີ້ແມ່ນຂັ້ນຕອນທີສອງຂອງຍຸກແຫ່ງການພິພາກສາຫຼັງຈາກທີ່ບອກຜູ້ຄົນກ່ຽວກັບຄວາມປະສົງຂອງພຣະເຈົ້າ ແລະ ເປົ້າໝາຍທີ່ພຣະເຈົ້າປາດຖະໜາທີ່ຈະບັນລຸໃນໄລຍະນີ້ ແລະ ກ່ຽວກັບບາດກ້າວສຸດທ້າຍຂອງພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກເທົ່ານັ້ນ. ແນ່ນອນ ຍັງມີສະຕິປັນຍາຂອງພຣະເຈົ້າໃນສິ່ງນີ້ເຊັ່ນກັນ. ເມື່ອຜູ້ຄົນໄດ້ລຸກຂຶ້ນຈາກຕຽງຄົນເຈັບຂອງພວກເຂົາ, ສິ່ງດຽວທີ່ພວກເຂົາສົນໃຈແມ່ນພວກເຂົາຈະຕາຍ ຫຼື ບໍ່ ຫຼື ການເຈັບເປັນຂອງພວກເຂົາຈະສາມາດຫາຍດີຈາກຮ່າງກາຍຂອງພວກເຂົາ ຫຼື ບໍ່. ພວກເຂົາບໍ່ສົນໃຈວ່າ ພວກເຂົາຈະມີນໍ້າໜັກເພີ່ມຂຶ້ນ ຫຼື ພວກເຂົາຈະໃສ່ເຄື່ອງນຸ່ງທີ່ຕົນເອງມັກໄດ້ ຫຼື ບໍ່. ດັ່ງນັ້ນ, ເມື່ອຜູ້ຄົນເຊື່ອຢ່າງໝົດໃຈວ່າ

ພວກເຂົາແມ່ນໜຶ່ງໃນບັນດາປະຊາຊົນຂອງພຣະເຈົ້າ ພຣະເຈົ້າຈຶ່ງຈະກ່າວເຖິງຄວາມຕ້ອງການຂອງພຣະອົງເທື່ອລະຂັ້ນຕອນ ແລະ ບອກຜູ້ຄົນວ່າ ໃນປັດຈຸບັນແມ່ນຍຸກໃດ. ນັ້ນກໍຍ້ອນວ່າ ຜູ້ຄົນມີພະລັງໃນການຕັ້ງໃຈກັບຂັ້ນຕອນຕ່າງໆຂອງການຄຸ້ມຄອງຂອງພຣະເຈົ້າໃນສອງສາມມື້ພາຍຫຼັງທີ່ພວກເຂົາໄດ້ເຊົາເຈັບເປັນເທົ່ານັ້ນ ແລະ ສະນັ້ນ ນີ້ກໍແມ່ນເວລາທີ່ເໝາະສົມທີ່ສຸດທີ່ຈະບອກພວກເຂົາ. ຫຼັງຈາກທີ່ຜູ້ຄົນໄດ້ເຂົ້າໃຈເທົ່ານັ້ນ ພວກເຂົາຈຶ່ງຈະເລີ່ມວິເຄາະ: ເນື່ອງຈາກນີ້ແມ່ນຂັ້ນຕອນທີສອງຂອງຍຸກແຫ່ງການພິພາກສາ, ຄວາມຕ້ອງການຂອງພຣະເຈົ້າຈຶ່ງຈະເຂັ້ມງວດຂຶ້ນ ແລະ ເຮົາຈະກາຍເປັນປະຊາຊົນຂອງພຣະເຈົ້າອີກຄົນ. ມັນຖືກຕ້ອງທີ່ຈະວິເຄາະ ແລະ ມະນຸດບໍ່ສາມາດບັນລຸການວິເຄາະໃນລັກສະນະນີ້ໄດ້, ເຊິ່ງດ້ວຍເຫດນັ້ນ ພຣະເຈົ້າຈຶ່ງນຳໃຊ້ຫຼັກການນີ້ໃນການກ່າວ.

ເມື່ອຜູ້ຄົນເຂົ້າໃຈໜ້ອຍໜຶ່ງ, ພຣະເຈົ້າຈຶ່ງເຂົ້າໂລກວິນຍານອີກຄັ້ງ ເພື່ອເວົ້າ ແລະ ເພື່ອວ່າພວກເຂົາຈະຖືກໂຈມຕີອີກຄັ້ງ. ໃນລະຫວ່າງການຕັ້ງຄຳຖາມດັ່ງກ່າວນີ້, ທຸກຄົນແມ່ນເກົາຫົວຂອງພວກເຂົາ, ສັບສົນ, ບໍ່ຮູ້ວ່າ ຈຸດຢືນຂອງພຣະເຈົ້າຢູ່ໃສ, ບໍ່ຮູ້ຈັກວ່າ ຄຳຖາມໃດຂອງພຣະເຈົ້າທີ່ຈະຕ້ອງຕອບ ແລະ ຍິ່ງໄປກວ່ານັ້ນ ແມ່ນບໍ່ຮູ້ຈັກວ່າ ຈະໃຊ້ພາສາຫຍັງ ເພື່ອຕອບຄຳຖາມຂອງພຣະເຈົ້າ. ຜູ້ຄົນສົງໄສວ່າ ສົມຄວນຫົວ ຫຼື ຮ້ອງໄຫ້ດີ. ສຳລັບຜູ້ຄົນແລ້ວ, ພຣະທຳເຫຼົ່ານີ້ແມ່ນເບິ່ງຄືກັບວ່າ ອາດຈະມີຄວາມລຶກລັບຢ່າງເລິກເຊິ່ງ ແຕ່ຄວາມຈິງແລ້ວ ແມ່ນກົງກັນຂ້າມທັງມວນ. ເຮົາຂໍເພີ່ມຄຳອະທິບາຍເພີ່ມເຕີມເລັກນ້ອຍສຳລັບເຈົ້າ ເພື່ອມັນຈະເຮັດໃຫ້ສະໝອງຂອງເຈົ້າພັກຜ່ອນ ແລະ ເຈົ້າຈະຮູ້ສຶກວ່າສິ່ງນີ້ແມ່ນສິ່ງທີ່ທຳມະດາ ແລະ ບໍ່ຈຳເປັນຕ້ອງຄິດກ່ຽວກັບມັນ. ທີ່ຈິງແລ້ວ, ເຖິງແມ່ນວ່າ ຈະມີພຣະທຳຫຼາຍຂໍ້ກໍຕາມ ແຕ່ກໍມີເປົ້າໝາຍດຽວຂອງພຣະເຈົ້າເທົ່ານັ້ນ ຄື: ການໄດ້ຮັບຄວາມຈົງຮັກພັກດີຈາກຜູ້ຄົນຜ່ານຄຳຖາມເຫຼົ່ານີ້. ແຕ່ມັນບໍ່ເໝາະສົມທີ່ຈະເວົ້າສິ່ງນີ້ໂດຍກົງ ສະນັ້ນພຣະເຈົ້າຈຶ່ງໃຊ້ຄຳຖາມອີກຄັ້ງ. ຢ່າງໃດກໍຕາມ, ນໍ້າສຽງຂອງການເວົ້າພຣະອົງແມ່ນອ່ອນລົງເປັນພິເສດ ເຊິ່ງບໍ່ຄືກັບຕອນເລີ່ມຕົ້ນ. ເຖິງແມ່ນວ່າ ພວກເຂົາຈະຖືກພຣະເຈົ້າຖາມຄຳຖາມ ແຕ່ຄວາມແຕກຕ່າງເຫຼົ່ານີ້ແມ່ນໄດ້ນຳເອົາຄວາມສະບາຍໃຈມາສູ່ຜູ້ຄົນຫຼາຍພໍສົມຄວນ. ເຈົ້າຄວນອ່ານແຕ່ລະຄຳຖາມຢ່າງລະອຽດ; ສິ່ງເຫຼົ່ານີ້ບໍ່ແມ່ນຖືກອ້າງອີງເຖິງເປັນປະຈຳໃນອະດີດບໍ? ໃນຄຳຖາມທຳມະດາເລັກນ້ອຍເຫຼົ່ານີ້ ແມ່ນມີເນື້ອຫາທີ່ອຸດົມສົມບູນ. ບາງເນື້ອຫາແມ່ນບັນລະຍາຍເຖິງຈິດໃຈຂອງຜູ້ຄົນ: "ພວກເຈົ້າເຕັມໃຈທີ່ຈະມີຄວາມສຸກກັບຊີວິດເທິງແຜ່ນດິນໂລກ ເຊິ່ງຄ້າຍກັບຊີວິດທີ່ຢູ່ເທິງສະຫວັນບໍ?" ບາງເນື້ອຫາແມ່ນ "ຄຳປະຕິຍານຂອງນັກຮົບ" ທີ່ພວກເຂົານຳໄປຢູ່ຕໍ່ໜ້າພຣະເຈົ້າ: "ພວກເຈົ້າສາມາດຍອມໃຫ້ຕົວເອງຖືກເຮົາເຮັດໃຫ້ຕາຍ ແລະ ຖືກເຮົານຳພາຄືກັນກັບໂຕແກະໄດ້ແທ້ບໍ?" ບາງເນື້ອຫາແມ່ນຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ມະນຸດ: "ຖ້າເຮົາບໍ່ເວົ້າໂດຍກົງ ແລ້ວເຈົ້າຈະສາມາດປະຖິ້ມທຸກຢ່າງທີ່ຢູ່ອ້ອມຂ້າງເຈົ້າ ແລະ ຍອມໃຫ້ເຮົາໃຊ້ເຈົ້າຢູ່ບໍ? ນີ້ບໍ່ແມ່ນຄວາມເປັນຈິງທີ່ເຮົາຕ້ອງການບໍ? ..." ພວກມັນຍັງມີຄຳແນະນຳ ແລະ ການຮັບປະກັນຂອງພຣະເຈົ້າສຳລັບມະນຸດ: "ເຖິງຢ່າງໃດກໍຕາມ ເຮົາຮຽກຮ້ອງບໍ່ໃຫ້ພວກເຈົ້າປະເມີນດ້ວຍຄວາມສົງໄສ ແລະ ຂໍໃຫ້ພວກເຈົ້າເອົາໃຈໃສ່ໃນການເຂົ້າສູ່ຂອງພວກເຈົ້າ ແລະ ເຂົ້າໃຈແກ່ນແທ້ຂອງພຣະທຳຂອງເຮົາ. ສິ່ງນີ້ຈະປ້ອງກັນບໍ່ໃຫ້ເຈົ້າເຂົ້າໃຈພຣະທຳຂອງເຮົາຜິດ

ແລະ ບໍ່ໃຫ້ມີຄວາມບໍ່ຊັດເຈນຕໍ່ຄວາມໝາຍຂອງເຮົາ ເຊິ່ງມັນຈະເຮັດໃຫ້ເຈົ້າລະເມີດຕໍ່ບົດບັນຍັດແຫ່ງການປົກຄອງຂອງເຮົາ”. ສຸດທ້າຍ, ພຣະເຈົ້າກ່າວກ່ຽວກັບຄວາມຫວັງຂອງພຣະອົງທີ່ມີຕໍ່ມະນຸດດັ່ງນີ້: “ເຮົາຫວັງວ່າ ພວກເຈົ້າຈະເຂົ້າໃຈເຈດຕະນາໃນພຣະທຳຂອງເຮົາສຳລັບພວກເຈົ້າ. ບໍ່ໃຫ້ຄິດເຖິງຄວາມຄາດຫວັງຂອງພວກເຈົ້າເອງອີກຕໍ່ໄປ ແລະ ຈົ່ງປະຕິບັດຕາມທີ່ພວກເຈົ້າໄດ້ຕັ້ງໝັ້ນຢູ່ຕໍ່ໜ້າເຮົາ ເພື່ອຍອມຮັບເອົາການປັ້ນແຕ່ງຂອງພຣະເຈົ້າໃນທຸກສິ່ງ”. ຄຳຖາມສຸດທ້າຍແມ່ນມີຄວາມໝາຍຢ່າງເລິກເຊິ່ງ. ມັນບັນດານໃຫ້ມີຄວາມຄິດ, ມັນເຮັດໃຫ້ມີຄວາມປະທັບໃຈໃນຜູ້ຄົນ ແລະ ຍາກທີ່ຈະລືມໄດ້ ຍ້ອນວ່າມັນເປັນສຽງດັງກ້ອງກັງວານຢ່າງບໍ່ຢຸດຢັ້ງຄືກັບກະດິງທີ່ຢູ່ໃກ້ຫູຂອງພວກເຂົາ...

ຂ້າງເທິງນີ້ແມ່ນຄຳອະທິບາຍກ່ຽວກັບພຣະທຳບາງຂໍ້ເພື່ອໃຫ້ເຈົ້າໃຊ້ເປັນບ່ອນອີງ.

# ບົດທີ 5

ເມື່ອພຣະເຈົ້າຮຽກຮ້ອງຈາກມະນຸດທີ່ຍາກສຳລັບພວກເຂົາຈະອະທິບາຍໄດ້ ແລະ ເມື່ອພຣະທຳຂອງພຣະອົງໂຈມຕີເຂົ້າໄປໃນຫົວໃຈຂອງມະນຸດໂດຍກົງ ແລະ ຜູ້ຄົນມອບຫົວໃຈທີ່ຈິງໃຈຂອງພວກເຂົາໃຫ້ພຣະອົງໄດ້ຊື່ນຊົມ, ພຣະເຈົ້າກໍຈຶ່ງມອບໂອກາດໃຫ້ພວກເຂົາໄດ້ໄຕ່ຕອງ, ຕັດສິນໃຈຢ່າງເດັດດ່ຽວ ແລະ ສະແຫວງຫາເສັ້ນທາງເພື່ອການປະຕິບັດ. ໃນລັກສະນະນີ້, ທຸກຄົນທີ່ເປັນປະຊາຊົນຂອງພຣະອົງກໍຈະຖວາຍຄວາມເປັນຢູ່ທັງໝົດຂອງພວກເຂົາໃຫ້ແກ່ພຣະເຈົ້າດ້ວຍຄວາມຕັ້ງໃຈອີກຄັ້ງ. ບາງເທື່ອ ບາງຄົນອາດວາງແຜນ ແລະ ສ້າງຕາຕະລາງປະຈຳວັນ ໃນຂະນະທີ່ພວກເຂົາກຽມຕົວລະດົມກຳລັງເພື່ອເຮັດວຽກໜັກ, ອຸທິດກຳລັງຂອງພວກເຂົາຕໍ່ແຜນການຄຸ້ມຄອງຂອງພຣະເຈົ້າ ເພື່ອນຳເອົາຄວາມສະຫງ່າລາສີມາສູ່ແຜນການນັ້ນ ແລະ ເລັ່ງໃຫ້ແຜນການນັ້ນໄປສູ່ຄວາມສຳເລັດໂດຍໄວ. ພຽງເມື່ອຜູ້ຄົນເລີ່ມເຊື່ອງຊ້ອນແນວຄິດແບບນີ້, ຍຶດຖືສິ່ງເຫຼົ່ານີ້ໄວ້ໃນຄວາມຄິດຂອງພວກເຂົາຢ່າງໃກ້ຊິດ ໃນຂະນະທີ່ພວກເຂົາເຮັດວຽກເຮືອນຂອງພວກເຂົາ, ໃນຂະນະທີ່ພວກເຂົາເວົ້າ ແລະ ໃນຂະນະທີ່ພວກເຂົາເຮັດວຽກ, ພຣະເຈົ້າກໍເລີ່ມເວົ້າອີກຄັ້ງວ່າ "ສຽງແຫ່ງພຣະວິນຍານຂອງເຮົາແມ່ນການສະແດງອອກຂອງອຸປະນິໄສທັງໝົດຂອງເຮົາ. ພວກເຈົ້າເຂົ້າໃຈບໍ?" ຍິ່ງມະນຸດຕັ້ງໝັ້ນຫຼາຍສໍ່າໃດ, ພວກເຂົາກໍຍິ່ງຕ້ອງການປາຖະໜາທີ່ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າຫຼາຍສໍ່ານັ້ນ ແລະ ພວກເຂົາກໍຍິ່ງປາຖະໜາໃຫ້ພຣະເຈົ້າຮຽກຮ້ອງຈາກພວກເຂົາຢ່າງຈິງຈັງຫຼາຍສໍ່ານັ້ນ. ຍ້ອນເຫດຜົນນີ້ ແລະ ສວຍເອົາໂອກາດນີ້ເພື່ອບອກກ່າວເຖິງພຣະທຳຂອງພຣະອົງ ພຣະເຈົ້າຈຶ່ງໃຫ້ສິ່ງທີ່ຜູ້ຄົນຕ້ອງການແກ່ພວກເຂົາ ເຊິ່ງໄດ້ຖືກກຽມພ້ອມເປັນເວລາດົນນານໂດຍເຂົ້າສູ່ຈຸດເລິກສຸດໃນຕົວຕົນຂອງພວກເຂົາ. ເຖິງແມ່ນພຣະທຳເຫຼົ່ານີ້ອາດເບິ່ງຄືຂ້ອນຂ້າງຮຸນແຮງ ຫຼື ກະດ້າງ, ສຳລັບມະນຸດຊາດແລ້ວ ພວກມັນຟັງເບິ່ງຄືວ່າມ່ວນຫູເກີນຄຳບັນລະຍາຍ. ທັນໃດນັ້ນ ຫົວໃຈຂອງພວກເຂົາກໍເຕັມໄປດ້ວຍຄວາມປິຕິຍິນດີ, ຄືກັບວ່າພວກເຂົາຢູ່ໃນສະຫວັນ ຫຼື ຖືກສົ່ງໄປອີກໂລກໜຶ່ງ ເຊິ່ງເປັນສະຫວັນວິມານແຫ່ງຈິນຕະນາການທີ່ເປັນຈິງ ແລະ ເປັນບ່ອນທີ່ເລື່ອງຕ່າງໆຂອງໂລກພາຍນອກຈະບໍ່ມີຜົນກະທົບຕໍ່ມະນຸດຊາດອີກຕໍ່ໄປ. ເພື່ອຫຼີກເວັ້ນເຫດການທີ່ຜູ້ຄົນຈະເວົ້າຈາກພາຍນອກ ແລະ ປະພຶດຈາກພາຍນອກ ດັ່ງທີ່ພວກເຂົາເຮັດໃນອະດີດຈົນກາຍເປັນນິໄສ ແລະ ໃນທີ່ສຸດ ພວກເຂົາກໍລົ້ມເຫຼວທີ່ຈະວາງຮາກຖານຢ່າງເໝາະສົມ, ຫຼັງຈາກສິ່ງທີ່ພວກເຂົາປາຖະໜາໃນຫົວໃຈຂອງພວກເຂົາຖືກບັນລຸ ແລະ ຍິ່ງໄປກວ່ານັ້ນກໍຄືຫຼັງຈາກທີ່ພວກເຂົາກຽມຕົວໄປເຮັດວຽກພ້ອມກັບຄວາມກະຕືລືລົ້ນຢ່າງຮ້ອນຮົນໃຈ, ພຣະເຈົ້າກໍຍັງຈະປັບປ່ຽນວິທີການເວົ້າຂອງພຣະອົງເຂົ້າໄປໃນຄວາມຄິດຂອງພວກເຂົາ ແລະ ໂຕ້ແຍ້ງຄວາມກະຕືລືລົ້ນ ແລະ ພິທີກຳທາງສາສະໜາທັງໝົດທີ່ພວກເຂົາຍຶດໄວ້ພາຍໃນຫົວໃຈຂອງພວກເຂົາ ໂດຍບໍ່ມີການຢັບຢັ້ງໃຈທັງສິ້ນ. ດັ່ງທີ່ພຣະເຈົ້າເວົ້າວ່າ "ພວກເຈົ້າໄດ້ເຫັນເຖິງຄວາມສຳຄັນທີ່ນອນຢູ່ໃນນີ້ຢ່າງແທ້ຈິງບໍ?" ບໍ່ວ່າມະນຸດຈະເດັດດ່ຽວໃນບາງສິ່ງບາງຢ່າງກ່ອນ ຫຼື ຫຼັງ, ພວກເຂົາກໍບໍ່ໄດ້ໃຫ້ຄວາມສຳຄັນຫຼາຍໃນການຮູ້ຈັກພຣະເຈົ້າຈາກການປະຕິບັດຂອງພຣະອົງ ຫຼື ຈາກພຣະທຳຂອງພຣະອົງ, ແຕ່ກົງກັນຂ້າມ

ພວກເຂົາສືບຕໍ່ໄຕ່ຕອງໃນຄໍາຖາມທີ່ວ່າ "ຂ້ານ້ອຍສາມາດເຮັດຫຍັງໄດ້ແດ່ໃຫ້ກັບພຣະເຈົ້າ? ນັ້ນຄືບັນຫາທີ່ສໍາຄັນ!" ນີ້ຄືເຫດຜົນທີ່ພຣະເຈົ້າເວົ້າວ່າ "ແລ້ວພວກເຈົ້າບັງອາດເອີ້ນຕົນເອງວ່າເປັນປະຊາຊົນຂອງເຮົາເມື່ອຢູ່ຕໍ່ໜ້າເຮົາ, ພວກເຈົ້າບໍ່ມີຢາງອາຍ, ແຮງໄກທີ່ຈະມີຄວາມຮູ້ສຶກ!" ທັນທີທີ່ພຣະເຈົ້າໄດ້ກ່າວພຣະທໍາເຫຼົ່ານີ້, ຜູ້ຄົນກໍມາເຂົ້າໃຈທັນທີ ແລະ ຄືກັບວ່າກໍາລັງຖືກໄຟຟ້າຊັອດ, ພວກເຂົາຮີບຖືກມືຂອງພວກເຂົາມາໄວ້ເທິງໜ້າເອິກທີ່ປອດໄພຂອງພວກເຂົາ, ໂດຍຢ້ານຢູ່ເລິກໆວ່າມັນຈະໄປທ້າທາຍຄວາມໂກດຮ້າຍຂອງພຣະເຈົ້າເປັນຄັ້ງທີສອງ. ນອກຈາກສິ່ງນີ້ແລ້ວ ພຣະເຈົ້າຍັງໄດ້ເວົ້າວ່າ "ບໍ່ໄວກໍຊ້າ ຄົນແບບພວກເຈົ້າຈະຖືກໂຍນອອກຈາກເຮືອນຂອງເຮົາ! ຢ່າໃຊ້ປະສົບການຂອງພວກເຈົ້າເພື່ອຫຼອກລວງເຮົາ ໂດຍເຮັດທໍາທ່າວ່າພວກເຈົ້າໄດ້ຢືນເປັນພະຍານໃຫ້ແກ່ເຮົາ!" ເມື່ອໄດ້ຍິນພຣະທໍາເຫຼົ່ານີ້, ຜູ້ຄົນກໍຢ້ານຫຼາຍຍິ່ງຂຶ້ນ, ຄືກັບວ່າພວກເຂົາໄດ້ເຫັນສິງໂຕ. ພວກເຂົາຮູ້ຢູ່ໃນໃຈຂອງພວກເຂົາເປັນຢ່າງດີ. ພວກເຂົາບໍ່ປາຖະໜາທີ່ຈະຖືກກິນໂດຍສິງໂຕ, ແຕ່ໃນອີກດ້ານໜຶ່ງ ພວກເຂົາກໍບໍ່ຮູ້ວິທີຫຼົບໜີ. ໃນຊ່ວງເວລານີ້, ແຜນການທີ່ຢູ່ໃນຫົວໃຈຂອງພວກເຂົາກໍຫາຍໄປຢ່າງບໍ່ມີຮ່ອງຮອຍ, ຢ່າງໝົດສິ້ນ ແລະ ສົມບູນ. ຜ່ານທາງພຣະທໍາຂອງພຣະເຈົ້າ, ເຮົາຮູ້ສຶກຄືກັບວ່າເຮົາສາມາດເຫັນທຸກດ້ານຂອງຄວາມອັບອາຍຂອງມະນຸດຊາດ: ເຮັດຄໍາຕົກ ແລະ ທ່າທາງລະອາຍໃຈ ຄືກັບຄົນທີ່ເສັງເຂົ້າວິທະຍາໄລບໍ່ຜ່ານ, ດ້ວຍອຸດົມການທີ່ສູງສົ່ງ, ຄອບຄົວທີ່ມີຄວາມສຸກ, ອະນາຄົດທີ່ສົດໃສ ແລະ ອື່ນໆອີກຫຼາຍຢ່າງ, ພ້ອມກັບນະໂຍບາຍສີ່ທັນສະໄໝພາຍໃນປີ 2000, ທຸກສິ່ງກາຍເປັນການເວົ້າທີ່ວ່າງເປົ່າ, ເປັນການສ້າງສາກຈິນຕະນາການໃນຮູບເງົານິຍາຍວິທະຍາສາດ. ນີ້ແມ່ນເພື່ອແລກປ່ຽນອົງປະກອບທີ່ຂື້ດ້ານກັບອົງປະກອບທີ່ຫ້າວຫັນ, ເຮັດໃຫ້ຜູ້ຄົນ ໃນທ່າມກາງຄວາມຂີ້ດ້ານຂອງພວກເຂົາ ລຸກຂຶ້ນຕ້ານຕໍ່ຕໍາແໜ່ງທີ່ພຣະເຈົ້າໄດ້ມອບໝາຍໃຫ້ກັບພວກເຂົາ. ທີ່ສໍາຄັນເປັນພິເສດກໍຄື ຄວາມຈິງແລ້ວມະນຸດຢ້ານທີ່ຈະສູນເສຍລາບຍົດນີ້ຫຼາຍ; ດັ່ງນັ້ນ, ພວກເຂົາຈຶ່ງຍຶດຕິດຢ່າງສິ້ນຫວັງກັບຕໍາແໜ່ງຫ້ອງການຂອງພວກເຂົາເອງ, ໂດຍຢ້ານຢູ່ເລິກໆວ່າບາງຄົນອາດຈະພະຍາຍາມຍາດຊິງເອົາມັນໄປ. ເມື່ອມະນຸດຊາດຢູ່ໃນຂອບຄວາມຄິດນີ້, ພຣະເຈົ້າກໍບໍ່ກັງວົນວ່າຜູ້ຄົນຈະຂີ້ດ້ານອີກ, ສະນັ້ນ ພຣະອົງຈຶ່ງປ່ຽນແປງພຣະທໍາແຫ່ງການພິພາກສາຂອງພຣະອົງເປັນພຣະທໍາແຫ່ງການສອບຖາມ. ບໍ່ແມ່ນພຽງແຕ່ພຣະອົງຈະໃຫ້ໂອກາດມະນຸດໄດ້ຫາຍໃຈ, ແຕ່ພຣະອົງຍັງໃຫ້ໂອກາດພວກເຂົານໍາເອົາຄວາມຫວັງທີ່ພວກເຂົາມີກ່ອນໜ້ານີ້ ແລະ ຄັດເລືອກພວກມັນອອກເພື່ອເປັນຂໍ້ອ້າງອີງໃນອະນາຄົດ: ສິ່ງໃດກໍຕາມທີ່ບໍ່ເໝາະສົມແມ່ນສາມາດປ່ຽນແປງໄດ້. ນີ້ເປັນຍ້ອນພຣະເຈົ້າຍັງບໍ່ທັນໄດ້ເລີ່ມຕົ້ນພາລະກິດຂອງພຣະອົງ, ນີ້ແມ່ນຄວາມໂຊກດີສ່ວນໜຶ່ງທີ່ຢູ່ໃນທ່າມກາງຄວາມໂຊກຮ້າຍທີ່ຍິ່ງໃຫຍ່ ແລະ ຍິ່ງໄປກວ່ານັ້ນ ກໍບໍ່ໄດ້ກ່າວໂທດພວກເຂົາ. ສະນັ້ນ ໃຫ້ເຮົາສືບຕໍ່ມອບຄວາມອຸທິດທັງໝົດຂອງເຮົາໃຫ້ແກ່ພຣະອົງ!

ຕໍ່ໄປ, ເຈົ້າຕ້ອງບໍ່ປະຖິ້ມພຣະທໍາຂອງພຣະເຈົ້າຍ້ອນຄວາມຢ້ານຂອງເຈົ້າ. ໃຫ້ລອງເບິ່ງວ່າພຣະເຈົ້າມີຄວາມຮຽກຮ້ອງໃໝ່ ຫຼື ບໍ່. ແນ່ນອນ, ເຈົ້າຈະຄົ້ນພົບຄວາມສິ່ງນີ້: "ຕັ້ງແຕ່ເວລານີ້ເປັນຕົ້ນໄປ, ໃນບັນດາທຸກສິ່ງ, ເຈົ້າຕ້ອງເຂົ້າສູ່ຄວາມເປັນຈິງແຫ່ງການປະຕິບັດ; ຖ້າມີແຕ່ເວົ້າເລື້ອຍເປື້ອຍຄືກັບທີ່ເຈົ້າໄດ້ເຮັດໃນອະດີດ, ມັນຈະບໍ່ພາໃຫ້ເຈົ້າໄປຮອດໃສເລີຍ". ໃນນີ້ກໍຍັງສະແດງເຖິງສະຕິປັນຍາຂອງ

ພຣະເຈົ້າເຊັ່ນກັນ. ພຣະເຈົ້າປົກປ້ອງພະຍານຂອງພຣະອົງເອງຢູ່ສະເໝີ ແລະ ເມື່ອຄວາມເປັນຈິງແຫ່ງພຣະທຳໃນອະດີດໄດ້ໄປເຖິງຈຸດສິ້ນສຸດ, ບໍ່ມີຜູ້ໃດສາມາດຢັ່ງເຖິງຄວາມຮູ້ກ່ຽວກັບ "ຄວາມເປັນຈິງແຫ່ງການປະຕິບັດ" ໄດ້. ສິ່ງນີ້ກໍພຽງພໍທີ່ຈະພິສູດໃຫ້ເຫັນຄວາມຈິງໃນສິ່ງທີ່ພຣະເຈົ້າເວົ້າວ່າ "ເຮົາຮັບໜ້າທີ່ເພື່ອປະຕິບັດພາລະກິດດ້ວຍຕົນເອງ". ມັນກ່ຽວຂ້ອງກັບຄວາມໝາຍທີ່ແທ້ຈິງຂອງພາລະກິດໃນຄວາມເປັນພຣະເຈົ້າ ແລະ ອີກຢ່າງ ດ້ວຍເຫດຜົນທີ່ວ່າ ຫຼັງຈາກທີ່ໄດ້ໄປເຖິງຈຸດເລີ່ມຕົ້ນໃໝ່ແລ້ວ ບໍ່ວ່າຢ່າງໃດກໍຕາມ ມະນຸດຊາດກໍຍັງບໍ່ສາມາດຢັ່ງເຖິງຄວາມໝາຍທີ່ແທ້ຈິງແຫ່ງພຣະທຳຂອງພຣະເຈົ້າ. ນີ້ກໍຍ້ອນວ່າ ໃນອະດີດ ຄົນສ່ວນໃຫຍ່ຕິດກັບຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ, ໃນຂະນະທີ່ປັດຈຸບັນ ພວກເຂົາບໍ່ຮູ້ຫຍັງໝົດກ່ຽວກັບຄວາມເປັນຈິງແຫ່ງການປະຕິບັດ, ເຊິ່ງພວກເຂົາເຂົ້າໃຈພຽງແຕ່ດ້ານນອກຂອງພຣະທຳເຫຼົ່ານີ້ເທົ່ານັ້ນ ແຕ່ບໍ່ແມ່ນແກ່ນແທ້ຂອງພວກມັນ. ສຳຄັນໄປກວ່ານັ້ນ, ມັນເປັນຍ້ອນ ໃນປັດຈຸບັນ ໃນການສ້າງອານາຈັກ ບໍ່ມີຜູ້ໃດໄດ້ຮັບອະນຸຍາດໃຫ້ແຊກແຊງ, ພຽງແຕ່ເຊື່ອຟັງຄຳສັ່ງຂອງພຣະເຈົ້າຄືກັບຫຸ່ນຍົນ. ຈົ່ງຈົດຈຳສິ່ງນີ້ໄວ້ໃຫ້ດີ! ທຸກຄັ້ງທີ່ພຣະເຈົ້າກ່າວເຖິງອະດີດ, ພຣະອົງເລີ່ມຕົ້ນເວົ້າກ່ຽວກັບສະຖານະການແທ້ຈິງໃນປັດຈຸບັນ; ນີ້ແມ່ນຮູບແບບຂອງການເວົ້າເພື່ອສ້າງຄວາມແຕກຕ່າງລະຫວ່າງສິ່ງທີ່ມາກ່ອນ ແລະ ສິ່ງທີ່ມານຳຫຼັງ ແລະ ຍ້ອນເຫດຜົນນີ້ຈຶ່ງສາມາດບັນລຸໝາກຜົນໄດ້ດີຍິ່ງຂຶ້ນ, ເຮັດໃຫ້ຜູ້ຄົນສາມາດປຽບທຽບປັດຈຸບັນກັບອະດີດ ແລະ ໃນລັກສະນະນີ້ຈຶ່ງຫຼີກເວັ້ນການສັບສົນທັງສອງຢ່າງ. ນີ້ແມ່ນດ້ານໜຶ່ງຂອງສະຕິປັນຍາຂອງພຣະເຈົ້າ ແລະ ເປົ້າໝາຍຂອງມັນກໍເພື່ອບັນລຸຜົນຂອງພາລະກິດ. ຫຼັງຈາກນີ້, ພຣະເຈົ້າກໍຈະເປີດເຜີຍຄວາມຂີ້ຮ້າຍຂອງມະນຸດຊາດອີກຄັ້ງ, ເພື່ອວ່າມະນຸດຊາດຈະບໍ່ລືມກິນ ແລະ ດື່ມພຣະທຳຂອງພຣະອົງໃນແຕ່ລະມື້ ແລະ ສຳຄັນໄປກວ່ານັ້ນ ກໍເພື່ອວ່າພວກເຂົາຈະຮູ້ຈັກກ່ຽວກັບຕົນເອງ ແລະ ນຳເອົາສິ່ງນີ້ເປັນບົດຮຽນທີ່ພວກເຂົາຕ້ອງຮຽນຮູ້ໃນແຕ່ລະມື້.

ຫຼັງຈາກທີ່ໄດ້ກ່າວພຣະທຳເຫຼົ່ານີ້, ພຣະເຈົ້າກໍໄດ້ບັນລຸຜົນທີ່ເປັນຈຸດປະສົງເດີມຂອງພຣະອົງ. ດ້ວຍເຫດນັ້ນ ພຣະອົງຈຶ່ງປັດຜ່ານສິ່ງນີ້ດ້ວຍສອງສາມປະໂຫຍກ ໂດຍບໍ່ໃສ່ໃຈວ່າມະນຸດຊາດຈະເຂົ້າໃຈພຣະອົງ ຫຼື ບໍ່, ຍ້ອນພາລະກິດຂອງຊາຕານບໍ່ກ່ຽວຂ້ອງກັບມະນຸດຊາດ, ແລ້ວມະນຸດກໍບໍ່ຮູ້ຈັກຫຍັງໝົດກ່ຽວກັບສິ່ງນີ້. ບັດນີ້ ເມື່ອປະໂລກແຫ່ງວິນຍານໄວ້ເບື້ອງຫຼັງແລ້ວ, ກໍຈົ່ງເບິ່ງເພີ່ມເຕີມວ່າພຣະເຈົ້າຮຽກຮ້ອງຈາກມະນຸດຊາດແນວໃດ: "ເມື່ອພັກຜ່ອນຢູ່ໃນເຮືອນຂອງເຮົາ, ເຮົາໄດ້ສັງເກດທຸກສິ່ງຢ່າງໃກ້ຊິດ: ທຸກຄົນເທິງແຜ່ນດິນໂລກແມ່ນວຸ້ນວາຍກັບ 'ການເດີນທາງໄປທົ່ວແຜ່ນດິນໂລກ' ແລະ ຟ້າວໄປໆມາໆລ້ອນແລ້ວແຕ່ຍ້ອນເຫັນແກ່ໂຊກຊະຕາຂອງພວກເຂົາ ແລະ ອະນາຄົດຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ບໍ່ມີຜູ້ໃດເລີຍທີ່ມີກຳລັງເຫຼືອໄວ້ສຳລັບການສ້າງອານາຈັກຂອງເຮົາ, ບໍ່ມີແມ່ນແຕ່ຄວາມພະຍາຍາມທີ່ຈະຫາຍໃຈ". ຫຼັງຈາກທີ່ແລກປ່ຽນຄຳເວົ້າຫຼິ້ນໆກັບມະນຸດ, ພຣະເຈົ້າຍັງບໍ່ສົນໃຈພວກເຂົາ, ແຕ່ສືບຕໍ່ເວົ້າຈາກທັດສະນະຂອງພຣະວິນຍານ ແລະ ເປີດເຜີຍສະຖານະການທົ່ວໄປຂອງມະນຸດທັງໝົດຜ່ານທາງພຣະທຳເຫຼົ່ານີ້. ມັນເຫັນໄດ້ຢ່າງຊັດເຈນຈາກ "ການເດີນທາງໄປທົ່ວແຜ່ນດິນໂລກ" ແລະ "ຟ້າວໄປໆມາໆ" ວ່າຊີວິດຂອງມະນຸດປາສະຈາກເນື້ອຫາທັງສິ້ນ. ຖ້າບໍ່ແມ່ນຍ້ອນ

ຄວາມລອດພົ້ນທີ່ຍິ່ງໃຫຍ່ຂອງພຣະເຈົ້າ ແລະ ໂດຍສະເພາະແມ່ນຍ້ອນຄົນທີ່ເກີດໃນຄອບຄົວທີ່ໄດ້ເສື່ອມຖອຍລົງ ເຊິ່ງເຄີຍເປັນຄອບຄົວທີ່ຍິ່ງໃຫຍ່ຂອງເຊື້ອສາຍລາຊະວົງຂອງຈີນ, ຜູ້ຄົນກໍຍິ່ງຈະດໍາລົງຊີວິດທັງໝົດຢ່າງສູນເປົ່າ ແລະ ພວກເຂົາຄວນຈະຕົກລົງສູ່ດິນແດນມໍລະນາ ຫຼື ນະຣົກດີກວ່າທີ່ຈະເກີດມາຢູ່ໃນໂລກນີ້. ພາຍໃຕ້ອໍານາດຂອງມັງກອນແດງທີ່ຍິ່ງໃຫຍ່ ພວກເຂົາໄດ້ລ່ວງເກີນພຣະເຈົ້າໂດຍບໍ່ຮູ້ຕົວ ແລະ ສະນັ້ນ ພວກເຂົາຈຶ່ງຕົກລົງຢູ່ພາຍໃຕ້ການຂ້ຽນຕີຂອງພຣະເຈົ້າຢ່າງບໍ່ຮູ້ຕົວ. ຍ້ອນເຫດຜົນນີ້, ພຣະເຈົ້າຈຶ່ງໄດ້ເອົາ "ຊ່ວຍເຫຼືອ" ແລະ "ຄົນເນລະຄຸນ", ແລ້ວວາງພວກເຂົາໄວ້ກົງກັນຂ້າມກັນເພື່ອວ່າມະນຸດອາດຮູ້ຈັກຕົນເອງຫຼາຍຂຶ້ນ, ສິ່ງນີ້ເຮັດໃຫ້ຄວາມເມດຕາຂອງພຣະອົງຊັດເຈນຂຶ້ນ. ສິ່ງນີ້ບໍ່ໄດ້ເຮັດໃຫ້ມີປະສິດທິພາບຫຼາຍຍິ່ງຂຶ້ນບໍ? ແນ່ນອນ ມັນເຫັນໄດ້ຢ່າງຊັດເຈນແລ້ວວ່າ ຈາກໃຈຄວາມຂອງພຣະທໍາຂອງພຣະເຈົ້າ ຜູ້ຄົນສາມາດສະຫຼຸບຄວາມກ່ຽວກັບອົງປະກອບໃນການຕໍານິ, ອົງປະກອບແຫ່ງຄວາມລອດພົ້ນ ແລະ ການອຸທອນ ແລະ ການຂົ່ມຂູ່ເລັກນ້ອຍຂອງຄວາມໂສກເສົ້າເສຍໃຈ. ເມື່ອອ່ານພຣະທໍາເຫຼົ່ານີ້, ຜູ້ຄົນເລີ່ມຮູ້ສຶກເສຍໃຈຢ່າງບໍ່ມີສະຕິ ແລະ ບໍ່ສາມາດເຮັດຫຍັງໄດ້ນອກຈາກຮ້ອງໄຫ້... ເຖິງຢ່າງໃດກໍຕາມ ພຣະເຈົ້າຈະບໍ່ຖືກຈໍາກັດດ້ວຍຄວາມຮູ້ສຶກໂສກເສົ້າພຽງສອງສາມປະການ ຫຼື ພຣະອົງຈະປະຖິ້ມພາລະກິດຂອງພຣະອົງໃນການລົງວິໄນປະຊາຊົນຂອງພຣະອົງ ແລະ ການຮຽກຮ້ອງຈາກພວກເຂົາ ຍ້ອນຄວາມເສື່ອມຊາມຂອງມະນຸດຊາດທັງປວງ. ຍ້ອນສິ່ງນີ້, ຫົວຂໍ້ຂອງພຣະອົງຈຶ່ງແຕະຕ້ອງເຖິງສະຖານະການໃນປັດຈຸບັນທັນທີ ແລະ ຍິ່ງໄປກວ່ານັ້ນ ພຣະອົງປະກາດຕໍ່ມະນຸດຊາດເຖິງຄວາມສະຫງ່າຜ່າເຜີຍຂອງບົດບັນຍັດແຫ່ງການບໍລິຫານຂອງພຣະອົງ ເພື່ອວ່າແຜນການຂອງພຣະອົງຈະສືບຕໍ່ຄືບໜ້າ. ນີ້ຄືເຫດຜົນທີ່ວ່າເປັນຫຍັງ ຫຼັງຈາກສິ່ງນີ້ ດ້ວຍຄວາມໄວ ແລະ ການໂຈມຕີທີ່ເໝາະສົມ ໃນຂະນະທີ່ເຫຼັກກໍາລັງຮ້ອນ ໃນຈຸດສໍາຄັນນີ້ ພຣະເຈົ້າຈຶ່ງປະກາດ ນໍາໃຊ້ລັດຖະທໍາມະນູນໃນເວລານີ້ ເຊິ່ງເປັນລັດຖະທໍາມະນູນທີ່ມະນຸດຕ້ອງອ່ານ ແລະ ໃສ່ໃຈກັບທຸກມາດຕາຢ່າງລະມັດລະວັງ ກ່ອນທີ່ພວກເຂົາຈະສາມາດເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າ. ບໍ່ຈໍາເປັນຕ້ອງລົງເລິກກ່ຽວກັບສິ່ງນີ້ໃນຕອນນີ້; ຜູ້ຄົນພຽງແຕ່ຕ້ອງການອ່ານຢ່າງຕັ້ງໃຈເທົ່ານັ້ນ.

ໃນປັດຈຸບັນ ພວກເຈົ້າ ເຊິ່ງເປັນຄົນກຸ່ມນີ້ທີ່ຢູ່ໃນນີ້ ແມ່ນເປັນຄົນທີ່ສາມາດເຫັນພຣະທໍາຂອງພຣະເຈົ້າຢ່າງແທ້ຈິງ. ເຖິງຢ່າງນັ້ນກໍຕາມ ໃນການຮູ້ຈັກພຣະເຈົ້າ ຜູ້ຄົນໃນປັດຈຸບັນແມ່ນຫຼ້າຫຼັງກວ່າຜູ້ຄົນທີ່ຢູ່ໃນຍຸກອະດີດຫຼາຍ. ສິ່ງນີ້ພຽງພໍທີ່ຈະເຮັດໃຫ້ເຫັນຢ່າງຊັດເຈນວ່າ ຊາຕານໄດ້ລົງທຶນຄວາມພະຍາຍາມຫຼາຍສໍ່າໃດໃນຜູ້ຄົນຕະຫຼອດເວລາສອງສາມພັນປີຜ່ານມາ, ພ້ອມກັບຂອບເຂດທີ່ມັນເຮັດໃຫ້ມະນຸດຊາດເສື່ອມຊາມ, ໃນລະດັບທີ່ຍິ່ງໃຫຍ່ຫຼາຍ ຈົນເຖິງກັບວ່າ ຂະໜາດພຣະເຈົ້າໄດ້ກ່າວພຣະທໍາຫຼາຍຂໍ້, ມະນຸດຊາດກໍຍັງບໍ່ເຂົ້າໃຈ ຫຼື ຮູ້ຈັກພຣະອົງ, ແຕ່ກົງກັນຂ້າມ ພວກເຂົາກ້າທີ່ຈະລຸກຂຶ້ນ ແລະ ຕໍ່ຕ້ານພຣະອົງຢ່າງເປີດເຜີຍ. ແລ້ວດ້ວຍເຫດນັ້ນ ພຣະເຈົ້າຈຶ່ງຍົກຄົນໃນຍຸກອະດີດມາປຽບທຽບກັບຄົນໃນປັດຈຸບັນຢູ່ເລື້ອຍໆ, ເພື່ອເປັນຂໍ້ອ້າງອີງຢ່າງແທ້ຈິງຕໍ່ຄົນໃນປັດຈຸບັນວ່າພວກເຂົາໄຮ້ຄວາມຮູ້ສຶກ ແລະ ໂງ່ຈ້າ. ຍ້ອນມະນຸດບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ຍ້ອນພວກເຂົາຂາດຄວາມເຊື່ອທີ່ແທ້ຈິງໃນພຣະອົງ, ພຣະເຈົ້າຈຶ່ງຕັດສິນມະນຸດຊາດວ່າ ບໍ່ມີຄຸນສົມບັດ ແລະ ເຫດຜົນ;

ສະນັ້ນ ພຣະອົງຈຶ່ງສະແດງໃຫ້ຜູ້ຄົນເຫັນເຖິງຄວາມອິດທົນ ແລະ ມອບຄວາມລອດພົ້ນໃຫ້ກັບພວກເຂົາຄັ້ງແລ້ວຄັ້ງເລົ່າ. ບັ້ນຮົບແມ່ນຖືກຕໍ່ສູ້ກັນຕາມເສັ້ນທາງເຫຼົ່ານີ້ໃນອານາຈັກແຫ່ງວິນຍານ: ມັນເປັນຄວາມຫວັງທີ່ສູນເປົ່າຂອງຊາຕານທີ່ຈະເຮັດໃຫ້ມະນຸດຊາດເສື່ອມຊາມຈົນເຖິງລະດັບໃດໜຶ່ງ, ເຮັດໃຫ້ໂລກສົກກະປົກ ແລະ ຊົ່ວຮ້າຍ ແລະ ແລ້ວກໍລາກດຶງຜູ້ຄົນລົງໄປສູ່ບຶງໜອງພ້ອມກັບມັນ ແລະ ທຳລາຍແຜນການຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ ແຜນການຂອງພຣະເຈົ້າບໍ່ແມ່ນເພື່ອເຮັດໃຫ້ມະນຸດຊາດທັງໝົດກາຍເປັນຄົນທີ່ຮູ້ຈັກພຣະອົງ, ແຕ່ກົງກັນຂ້າມແມ່ນເພື່ອເລືອກເອົາສ່ວນໜຶ່ງເພື່ອເປັນຕົວແທນໃຫ້ກັບທັງໝົດ, ປ່ອຍສ່ວນທີ່ເຫຼືອໃຫ້ເປັນຂອງເສຍ, ເປັນສິນຄ້າໝົດຄຸນນະພາບທີ່ຈະຖືກໂຍນຖິ້ມລົງກອງຂີ້ເຫຍື້ອ. ສະນັ້ນ ເຖິງແມ່ນວ່າ ຈາກມຸມມອງຂອງຊາຕານ ການຄອບຄອງຄົນສອງສາມຄົນອາດເປັນໂອກາດດີທີ່ຈະທຳລາຍແຜນການຂອງພຣະເຈົ້າ, ຄົນໂງ່ແບບຊາຕານຈະສາມາດຮູ້ຈັກເຈດຕະນາຂອງພຣະເຈົ້າໄດ້ແນວໃດ? ນີ້ແມ່ນເຫດຜົນທີ່ພຣະເຈົ້າເວົ້າດົນນານມາແລ້ວວ່າ "ເຮົາໄດ້ປົກປິດໃບໜ້າຂອງເຮົາເພື່ອຫຼີກເວັ້ນທີ່ຈະເບິ່ງໂລກນີ້". ພວກເຮົາຮູ້ຈັກໜ້ອຍດຽວກ່ຽວກັບສິ່ງນີ້ ແລະ ພຣະເຈົ້າບໍ່ໄດ້ຂໍໃຫ້ມະນຸດສາມາດເຮັດສິ່ງໃດໜຶ່ງ; ກົງກັນຂ້າມ ພຣະອົງຕ້ອງການໃຫ້ພວກເຂົາເຂົ້າໃຈວ່າ ສິ່ງທີ່ພຣະເຈົ້າເຮັດນັ້ນອັດສະຈັນ ແລະ ບໍ່ສາມາດຢັ່ງເຖິງໄດ້ ແລະ ເຄົາລົບບູຊາພຣະອົງໃນຫົວໃຈຂອງພວກເຂົາ. ຕາມທີ່ມະນຸດຈິນຕະນາການ, ຖ້າພຣະເຈົ້າຕ້ອງຂ້ຽນຕີພວກເຂົາໂດຍບໍ່ຄຳນຶງເຖິງສະຖານະການຕ່າງໆ, ແລ້ວໂລກທັງໝົດກໍຈະຈິບຫາຍໄປແຕ່ດົນແລ້ວ. ສິ່ງນີ້ຈະບໍ່ເທົ່າກັບການຕົກລົງສູ່ກັບດັກຂອງຊາຕານບໍ? ດ້ວຍເຫດນັ້ນ ພຣະເຈົ້າພຽງແຕ່ໃຊ້ພຣະທຳຂອງພຣະອົງເພື່ອບັນລຸຜົນທີ່ພຣະອົງມີຢູ່ໃນຈິດໃຈເທົ່ານັ້ນ, ແຕ່ມັນບໍ່ເຄີຍເກີດເປັນຈິງ. ນີ້ບໍ່ແມ່ນຕົວຢ່າງຂອງພຣະທຳຂອງພຣະອົງທີ່ວ່າ "ຖ້າເຮົາບໍ່ສົງສານທີ່ພວກເຈົ້າຂາດຄຸນສົມບັດ, ຂາດເຫດຜົນ ແລະ ຄວາມເຂົ້າໃຈ, ແລ້ວພວກເຈົ້າທຸກຄົນກໍຈະຈິບຫາຍໃນທ່າມກາງການຂ້ຽນຕີຂອງເຮົາ ແລະ ຖືກກວາດລ້າງອອກຈາກການມີຊີວິດຢູ່. ເຖິງຢ່າງໃດກໍຕາມ ຈົນກວ່າພາລະກິດຂອງເຮົາເທິງແຜ່ນດິນໂລກຈະສຳເລັດລົງ, ເຮົາຈະຍັງຄົງຜ່ອນຜັນກັບມະນຸດຊາດຕໍ່ໄປ" ບໍ?

# ບົດທີ 6

ຜູ້ຄົນຕົກຕະລຶງເມື່ອພວກເຂົາໄດ້ອ່ານພຣະວັດຈະນະຂອງພຣະເຈົ້າ ແລະ ພວກເຂົາຄິດວ່າ ພຣະເຈົ້າໄດ້ກະທຳການທີ່ຍິ່ງໃຫຍ່ໃນໂລກແຫ່ງວິນຍານ ເຊິ່ງເປັນສິ່ງທີ່ມະນຸດບໍ່ສາມາດເຮັດໄດ້ ແລະ ພຣະເຈົ້າເອງກໍຕ້ອງເຮັດໃຫ້ສຳເລັດດ້ວຍພຣະອົງເອງ. ສະນັ້ນ ພຣະເຈົ້າຈຶ່ງໄດ້ກ່າວພຣະທຳກ່ຽວກັບຄວາມອົດທົນຕໍ່ມະນຸດຊາດອີກຄັ້ງ. ພວກເຂົາມີຄວາມຂັດແຍ້ງຢູ່ໃນໃຈຂອງພວກເຂົາ: “ພຣະເຈົ້າບໍ່ແມ່ນພຣະເຈົ້າແຫ່ງຄວາມເມດຕາ ແລະ ຄວາມກະລຸນາ, ພຣະອົງແມ່ນພຣະເຈົ້າທີ່ໂຈມຕີມະນຸດເທົ່ານັ້ນ. ເຫດໃດພຣະອົງຈຶ່ງຈະອົດທົນຕໍ່ພວກເຮົາ? ເປັນໄປໄດ້ບໍ ທີ່ພຣະເຈົ້າໄດ້ປ່ຽນວິທີການໃໝ່ອີກຄັ້ງ?” ເມື່ອແນວຄິດເຫຼົ່ານີ້ ແລະ ຄວາມຄິດເຫຼົ່ານີ້ໄດ້ເຂົ້າໄປຢູ່ໃນໃຈຂອງພວກເຂົາ, ພວກເຂົາກໍຈະພະຍາຍາມຢ່າງສຸດຄວາມສາມາດ ເພື່ອຕໍ່ຕ້ານກັບສິ່ງເຫຼົ່ານັ້ນ. ແຕ່ຫຼັງຈາກທີ່ພາລະກິດຂອງພຣະເຈົ້າໄດ້ດຳເນີນໄປເປັນເວລາໃດໜຶ່ງ ພຣະວິນຍານບໍລິສຸດກໍປະຕິບັດພາລະກິດທີ່ຍິ່ງໃຫຍ່ໃນຄຣິສຕະຈັກ ແລະ ທຸກຄົນກໍເລີ່ມເຮັດໜ້າທີ່ຂອງພວກເຂົາ, ທຸກຄົນເຂົ້າສູ່ວິທີການຂອງພຣະເຈົ້າ ເນື່ອງຈາກບໍ່ມີໃຜຈະສາມາດເຫັນຄວາມບໍ່ສົມບູນໃດໆໃນສິ່ງທີ່ພຣະເຈົ້າກ່າວ ແລະ ກະທຳ. ສ່ວນວ່າ ແມ່ນຫຍັງຄືຂັ້ນຕອນຕໍ່ໄປຂອງພຣະເຈົ້ານັ້ນ ບໍ່ມີໃຜຮູ້ແມ່ນແຕ່ໜ້ອຍດຽວ. ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້: “ໃນບັນດາທຸກສິ່ງທີ່ຢູ່ພາຍໃຕ້ສະຫວັນ ສິ່ງໃດທີ່ບໍ່ຢູ່ໃນກຳມືຂອງເຮົາ? ສິ່ງໃດແດ່ທີ່ບໍ່ເຮັດພາຍໃຕ້ການຊີ້ນຳຂອງເຮົາ?” ເຮົາຂໍສະເໜີຄຳແນະນຳບາງຂໍ້ໃຫ້ກັບພວກເຈົ້າ, ແຕ່ຢ່າງໃດກໍຕາມ: ໃນເລື່ອງທີ່ບໍ່ຊັດເຈນສຳລັບພວກເຈົ້າ, ພວກເຈົ້າບໍ່ຕ້ອງເວົ້າ ຫຼື ເຮັດສິ່ງໃດເລີຍ. ເຮົາເວົ້າສິ່ງນີ້ບໍ່ແມ່ນເພື່ອຕ້ານຄວາມກະຕືລືລົ້ນຂອງເຈົ້າ ແຕ່ເພື່ອອະນຸຍາດໃຫ້ເຈົ້າເຮັດຕາມການຊີ້ນຳຂອງພຣະເຈົ້າໃນການກະທຳຂອງເຈົ້າ. ບໍ່ວ່າກໍລະນີໃດໆ ຖ້າເຈົ້າສູນເສຍກຳລັງໃຈ ຫຼື ມີຄວາມສົງໄສ ຍ້ອນການທີ່ເຮົາໄດ້ກ່າວຄຳວ່າ “ຄວາມບໍ່ສົມບູນ”; ເປົ້າໝາຍຫຼັກຂອງເຮົາກໍເພື່ອເຕືອນເຈົ້າ ເພື່ອໃຫ້ເອົາໃຈໃສ່ກັບພຣະທຳຂອງພຣະເຈົ້າ. ຜູ້ຄົນຕົກຕະລຶງອີກຄັ້ງ ເມື່ອພວກເຂົາອ່ານພຣະທຳຂອງພຣະເຈົ້າ ທີ່ວ່າ “ການເຂົ້າໃຈຢ່າງລະອຽດເຖິງເລື່ອງລາວຂອງວິນຍານ, ການເອົາໃຈໃສ່ກັບພຣະທຳຂອງເຮົາ ແລະ ການມີຄວາມສາມາດຢ່າງແທ້ຈິງກ່ຽວກັບພຣະວິນຍານ ແລະ ຕົວຕົນຂອງເຮົາ, ກ່ຽວກັບພຣະທຳ ແລະ ຕົວຕົນຂອງເຮົາ ແມ່ນເປັນສິ່ງທີ່ແຍກອອກຈາກກັນບໍ່ໄດ້ ເພື່ອວ່າ ທຸກຄົນຈະສາມາດເຮັດໃຫ້ເຮົາພໍໃຈໃນເວລາຢູ່ຕໍ່ໜ້າເຮົາ”. ໃນອະດີດພວກເຂົາອ່ານພຣະທຳກ່ຽວກັບການເຕືອນ, ພຣະທຳກ່ຽວກັບຄວາມອົດທົນຂອງພຣະເຈົ້າ ແຕ່ໃນປັດຈຸບັນ ພຣະເຈົ້າກ່າວກ່ຽວກັບເລື່ອງວິນຍານຢ່າງກະທັນຫັນ. ມັນເກີດຫຍັງຂຶ້ນ? ເປັນຫຍັງພຣະເຈົ້າຈຶ່ງປ່ຽນວິທີການກ່າວຂອງພຣະອົງຢູ່ຕະຫຼອດເວລາ? ເປັນຫຍັງສິ່ງທັງໝົດນີ້ຈຶ່ງຖືກຖືວ່າ ເປັນສິ່ງທີ່ແຍກອອກຈາກກັນບໍ່ໄດ້? ເປັນໄປໄດ້ບໍ ທີ່ພຣະທຳຂອງພຣະເຈົ້າບໍ່ເປັນຈິງ? ຫຼັງຈາກອ່ານພຣະທຳຂອງພຣະເຈົ້າຢ່າງໃກ້ຊິດ, ມັນໄດ້ພົບວ່າ ເມື່ອເນື້ອໜັງຂອງພຣະເຈົ້າ ແລະ ພຣະວິນຍານຂອງພຣະອົງຖືກແຍກອອກຈາກກັນ, ເນື້ອໜັງກໍກາຍເປັນຮ່າງກາຍທີ່ເປັນຮູບປະທຳດ້ວຍຄຸນລັກສະນະທີ່ເປັນເນື້ອໜັງ ເຊິ່ງເປັນສິ່ງທີ່ຜູ້ຄົນເອີ້ນວ່າ ເປັນຊາກສົບທີ່ຍ່າງໄດ້. ເນື້ອໜັງທີ່ບັງເກີດເປັນມະນຸດແມ່ນ

ມາຈາກພຣະວິນຍານ: ພຣະອົງແມ່ນຕົວຕົນຂອງພຣະວິນຍານ, ເປັນພຣະທຳທີ່ກາຍເປັນເນື້ອໜັງ. ເວົ້າອີກຢ່າງໜຶ່ງກໍຄື ພຣະເຈົ້າເອງແມ່ນອາໄສຢູ່ໃນເນື້ອໜັງ. ສິ່ງດັ່ງກ່າວເປັນການແຍກພຣະວິນຍານຂອງພຣະເຈົ້າຈາກຊີວິດຂອງພຣະອົງຢ່າງຈິງຈັງ. ດ້ວຍເຫດນັ້ນ, ເຖິງວ່າ ພຣະອົງຈະຖືກເອີ້ນວ່າ ມະນຸດ ແຕ່ພຣະອົງກໍບໍ່ແມ່ນມະນຸດ. ພຣະອົງບໍ່ມີຄຸນລັກສະນະຂອງມະນຸດ, ພຣະອົງແມ່ນສິ່ງມີຊີວິດ ທີ່ພຣະເຈົ້າເອົາມາສວມໃສ່ຕົວເອງ ເຊິ່ງເປັນສິ່ງທີ່ມີຊີວິດ ທີ່ພຣະເຈົ້າຮັບຮອງ. ພຣະທຳຂອງພຣະເຈົ້າສະແດງໃຫ້ເຫັນພຣະວິນຍານຂອງພຣະເຈົ້າ ແລະ ພຣະທຳຂອງພຣະເຈົ້າແມ່ນຖືກເປີດເຜີຍໃນເນື້ອໜັງໂດຍກົງ ເຊິ່ງຍິ່ງໄປກວ່ານັ້ນ ມັນຍັງສະແດງໃຫ້ເຫັນວ່າ ພຣະເຈົ້າດຳລົງຊີວິດໃນເນື້ອໜັງ ແລະ ເປັນພຣະເຈົ້າທີ່ແທ້ຈິງ. ດ້ວຍເຫດນັ້ນ ຈຶ່ງພິສູດໃຫ້ເຫັນການມີຢູ່ຂອງພຣະເຈົ້າ ແລະ ເຮັດໃຫ້ຍຸກແຫ່ງການຕໍ່ຕ້ານຂອງມະນຸດທີ່ມີຕໍ່ພຣະເຈົ້ານັ້ນຈົບລົງ. ຫຼັງຈາກໄດ້ບອກຜູ້ຄົນກ່ຽວກັບເສັ້ນທາງໃນການຮູ້ຈັກພຣະເຈົ້າ, ພຣະເຈົ້າກໍໄດ້ປ່ຽນຫົວຂໍ້ອີກຄັ້ງ ໂດຍທີ່ຫັນປ່ຽນໄປອີກດ້ານໜຶ່ງຂອງເລື່ອງ.

"ເຮົາໄດ້ໄປທຸກບ່ອນທີ່ມີຢູ່, ເຮົາໄດ້ແນມເບິ່ງທົ່ວຈັກກະວານທີ່ກວ້າງໃຫຍ່ໄພສານ ແລະ ເຮົາໄດ້ຍ່າງໃນທ່າມກາງທຸກຄົນ, ໄດ້ຊີມຄວາມຫວານ ແລະ ຄວາມຂົມໃນທ່າມກາງມະນຸດ". ເຖິງແມ່ນວ່າພຣະທຳເຫຼົ່ານີ້ຈະທຳມະດາ ແຕ່ມະນຸດກໍບໍ່ເຂົ້າໃຈພຣະທຳເຫຼົ່ານີ້ໄດ້ໂດຍງ່າຍດາຍ. ຫົວຂໍ້ໄດ້ປ່ຽນໄປແຕ່ໃຈຄວາມແມ່ນຍັງຄືເກົ່າ: ມັນຍັງເຮັດໃຫ້ຜູ້ຄົນຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດ. ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ ພຣະອົງໄດ້ຊີມຄວາມຫວານ ແລະ ຄວາມຂົມໃນທ່າມກາງມະນຸດ? ເປັນຫຍັງພຣະອົງຈຶ່ງເວົ້າວ່າ ພຣະອົງໄດ້ຍ່າງໃນທ່າມກາງທຸກຄົນ? ພຣະເຈົ້າແມ່ນພຣະວິນຍານ ແລະ ພຣະອົງຍັງແມ່ນສິ່ງທີ່ມີຊີວິດທີ່ບັງເກີດເປັນມະນຸດ. ເປັນພຣະວິນຍານ ທີ່ບໍ່ໄດ້ຖືກຜູກມັດດ້ວຍຂໍ້ຈຳກັດຂອງການບັງເກີດເປັນມະນຸດ, ພຣະວິນຍານແມ່ນສາມາດໄປທຸກບ່ອນທີ່ມີຢູ່, ພຣະວິນຍານສາມາດແນມເບິ່ງທົ່ວຈັກກະວານທີ່ກວ້າງໃຫຍ່ໄພສານ, ນີ້ສະແດງໃຫ້ເຫັນວ່າ ພຣະວິນຍານຂອງພຣະເຈົ້າເຕີມເຕັມຈັກກະວານທັງໝົດ, ພຣະອົງປົກຄຸມແຜ່ນດິນໂລກຈາກຂົ້ວໂລກໜຶ່ງຫາຂົ້ວໂລກໜຶ່ງ, ບໍ່ມີສິ່ງໃດທີ່ບໍ່ຖືກຈັດແຈງໂດຍມືຂອງພຣະເຈົ້າ ແລະ ບໍ່ມີບ່ອນໃດທີ່ບໍ່ພົບເຫັນຮອຍຕີນຂອງພຣະເຈົ້າ. ເຖິງແມ່ນວ່າພຣະວິນຍານໄດ້ກາຍເປັນເນື້ອໜັງ ແລະ ເກີດເປັນມະນຸດ ແຕ່ການດຳລົງຊີວິດຢູ່ຂອງພຣະວິນຍານກໍບໍ່ໄດ້ປາສະຈາກສິ່ງທີ່ມະນຸດຕ້ອງການທັງໝົດ; ຕົວຕົນຂອງພຣະເຈົ້າກໍຕ້ອງກິນ, ນຸ່ງຫົ່ມ, ນອນ ແລະດຳລົງຊີວິດຕາມປົກກະຕິ ແລະ ພຣະອົງເຮັດໃນສິ່ງທີ່ຜູ້ຄົນຄວນເຮັດຕາມປົກກະຕິ. ແຕ່ວ່າ ຍ້ອນແກ່ນແທ້ທີ່ຢູ່ພາຍໃນຂອງພຣະອົງແຕກຕ່າງ, ພຣະອົງຈຶ່ງບໍ່ຄືກັນກັບ "ມະນຸດ" ທີ່ຜູ້ຄົນເວົ້າເຖິງ. ເຖິງແມ່ນວ່າ ພຣະອົງຈະທົນທຸກທ່າມກາງມະນຸດ ແຕ່ພຣະອົງກໍບໍ່ໄດ້ປະຖິ້ມພຣະວິນຍານຍ້ອນຄວາມທຸກດັ່ງກ່າວນັ້ນ. ເຖິງແມ່ນວ່າ ພຣະອົງຈະໄດ້ຮັບພອນ ແຕ່ພຣະອົງກໍບໍ່ໄດ້ລືມພຣະວິນຍານຍ້ອນພອນເຫຼົ່ານັ້ນ. ພຣະວິນຍານ ແລະ ສິ່ງມີຊີວິດປະຕິບັດພາລະກິດຢ່າງມິດງຽບດ້ວຍຄວາມປອງດອງ. ພຣະວິນຍານ ແລະ ສິ່ງມີຊີວິດບໍ່ສາມາດຖືກແຍກອອກຈາກກັນ ແລະ ທັງສອງບໍ່ເຄີຍຖືກແຍກອອກຈາກກັນ ເນື່ອງຈາກວ່າ ສິ່ງມີຊີວິດແມ່ນຕົວຕົນຂອງພຣະວິນຍານ, ພຣະອົງມາຈາກພຣະວິນຍານເຊິ່ງເປັນພຣະວິນຍານທີ່ມີຮູບຮ່າງ. ສະນັ້ນ ການທີ່ຢູ່ເໜືອກວ່າສິ່ງອື່ນໃດແມ່ນເປັນໄປບໍ່ໄດ້ສຳລັບ

ພຣະວິນຍານທີ່ຢູ່ໃນເນື້ອໜັງ; ນັ້ນກໍຄື ພຣະວິນຍານແມ່ນບໍ່ສາມາດເຮັດໃນສິ່ງທີ່ເໜືອທຳມະຊາດ ເຊິ່ງໝາຍຄວາມວ່າ ພຣະວິນຍານບໍ່ສາມາດອອກຈາກຮ່າງກາຍໄດ້. ຖ້າພຣະອົງອອກຈາກຮ່າງກາຍທີ່ເປັນເນື້ອໜັງ ພຣະເຈົ້າທີ່ບັງເກີດເປັນມະນຸດກໍຈະສູນເສຍຄວາມໝາຍ. ມີພຽງເມື່ອພຣະວິນຍານຖືກສະແດງອອກຢ່າງສົມບູນໃນຮ່າງກາຍເທົ່ານັ້ນ ມະນຸດຈຶ່ງຈະຮູ້ຈັກພຣະເຈົ້າແຫ່ງຄວາມເປັນຈິງ ແລະ ຫຼັງຈາກນັ້ນ ຄວາມປະສົງຂອງພຣະເຈົ້າກໍຈະບັນລຸຜົນ. ມີພຽງຫຼັງຈາກທີ່ໄດ້ແນະນຳຄວາມແຕກຕ່າງລະຫວ່າງຮ່າງກາຍທີ່ເປັນເນື້ອໜັງ ແລະ ພຣະວິນຍານໃຫ້ກັບມະນຸດເທົ່ານັ້ນ ພຣະເຈົ້າຈຶ່ງຈະສາມາດຊີ້ໃຫ້ເຫັນເຖິງຄວາມຕາບອດ ແລະ ຄວາມບໍ່ເຊື່ອຟັງຂອງມະນຸດໄດ້ ດັ່ງທີ່ພຣະອົງໄດ້ກ່າວໄວ້ວ່າ: "ແຕ່ມະນຸດກໍບໍ່ເຄີຍຮູ້ຈັກເຮົາຢ່າງແທ້ຈິງ, ບໍ່ເຄີຍເອົາໃຈໃສ່ເຮົາໃນລະຫວ່າງການເດີນທາງຂອງເຮົາ". ໃນດ້ານໜຶ່ງ ພຣະເຈົ້າເວົ້າວ່າ ພຣະອົງລີ້ຢ່າງລັບໆຢູ່ໃນຮ່າງກາຍທີ່ເປັນເນື້ອໜັງ ໂດຍບໍ່ເຄີຍເຮັດສິ່ງໃດທີ່ເໜືອທຳມະຊາດເພື່ອໃຫ້ຜູ້ຄົນເຫັນ; ໃນອີກດ້ານໜຶ່ງ ພຣະອົງຕຳນິວ່າ ມະນຸດບໍ່ຮູ້ຈັກພຣະອົງ. ບໍ່ມີສິ່ງໃດຂັດແຍ້ງໃນສິ່ງນີ້. ຄວາມຈິງແລ້ວ ຖ້າເບິ່ງຢ່າງລະອຽດ ມັນກໍ່ບໍ່ຍາກທີ່ຈະເຫັນວ່າ ພຣະເຈົ້າບັນລຸເປົ້າໝາຍຂອງພຣະອົງຈາກສອງດ້ານເຫຼົ່ານີ້. ຖ້າພຣະເຈົ້າຕ້ອງສະແດງເຄື່ອງໝາຍບອກ ແລະ ສິ່ງມະຫັດສະຈັນ ທີ່ເໜືອທຳມະຊາດ ພຣະອົງແມ່ນບໍ່ຈຳເປັນຕ້ອງຮັບພາລະກິດທີ່ຍິ່ງໃຫຍ່ນີ້. ພຽງພຣະອົງໃຊ້ປາກຂອງພຣະອົງສາບແຊ່ງຜູ້ຄົນໃຫ້ຕາຍ ແລະ ພວກເຂົາກໍຈະຕາຍທັນທີ ແລະ ດ້ວຍເຫດນັ້ນ ທຸກຄົນກໍຈະເຊື່ອພຣະອົງ ແຕ່ສິ່ງນີ້ບໍ່ໄດ້ບັນລຸເປົ້າໝາຍຂອງພຣະເຈົ້າໃນການເປັນເນື້ອໜັງ. ຖ້າພຣະເຈົ້າຈະກະທຳໃນສິ່ງເຫຼົ່ານັ້ນຢ່າງແທ້ຈິງ ຜູ້ຄົນກໍຈະບໍ່ມີວັນສາມາດເຊື່ອໃນການມີຢູ່ຂອງພຣະອົງຢ່າງມີສະຕິໄດ້. ພວກເຂົາຈະບໍ່ສາມາດມີຄວາມເຊື່ອໄດ້ຢ່າງແທ້ຈິງ ແລະ ຍິ່ງໄປກວ່ານັ້ນ ພວກເຂົາຈະເຂົ້າໃຈຜິດວ່າ ມານຮ້າຍເປັນພຣະເຈົ້າ. ສຳຄັນໄປກວ່ານັ້ນ ຜູ້ຄົນຈະບໍ່ມີວັນສາມາດຮູ້ຈັກອຸປະນິໄສຂອງພຣະເຈົ້າ ແລ້ວນີ້ບໍ່ແມ່ນດ້ານໜຶ່ງຂອງຄວາມໝາຍຊີວິດຂອງພຣະເຈົ້າໃນເນື້ອໜັງບໍ? ຖ້າຜູ້ຄົນບໍ່ສາມາດຮູ້ຈັກພຣະເຈົ້າ ແລ້ວພຣະເຈົ້າທີ່ເລື່ອນລອຍ ນັ້ນກໍຄື ພຣະເຈົ້າທີ່ເໜືອທຳມະຊາດກໍຈະມີອຳນາດໃນທ່າມກາງມະນຸດຕະຫຼອດໄປ. ໃນສິ່ງນີ້ ຜູ້ຄົນຈະບໍ່ຖືກຄອບງຳໂດຍແນວຄິດຂອງຕົນເອງບໍ? ຖ້າຈະເວົ້າໃຫ້ຈະແຈ້ງກໍຄື, ມັນຈະບໍ່ແມ່ນຊາຕານ ນັ້ນກໍຄືມານຮ້າຍບໍ ທີ່ມີອຳນາດ? "ເປັນຫຍັງເຮົາຈຶ່ງເວົ້າວ່າ ເຮົາໄດ້ເອົາອຳນາດກັບຄືນມາ? ເປັນຫຍັງເຮົາຈຶ່ງເວົ້າວ່າ ມີຄວາມສຳຄັນຫຼາຍໃນການບັງເກີດເປັນມະນຸດ?" ໃນເວລາທີ່ພຣະເຈົ້າກາຍເປັນເນື້ອໜັງ ແມ່ນເວລາທີ່ພຣະອົງເອົາອຳນາດກັບຄືນ ແລະ ມັນຍັງແມ່ນເວລາທີ່ຄວາມເປັນພຣະເຈົ້າຂອງພຣະອົງປາກົດອອກມາໂດຍກົງ ເພື່ອດຳເນີນການ. ທຸກຄົນຈະຮູ້ຈັກພຣະເຈົ້າແຫ່ງຄວາມເປັນຈິງເທື່ອລະໜ້ອຍ ແລະ ດ້ວຍເຫດນັ້ນ ກໍຈະລຶບພື້ນທີ່ຂອງຊາຕານໃນໃຈຂອງພວກເຂົາອອກຢ່າງສິ້ນເຊີງ ແລະ ມອບພື້ນທີ່ອັນເລິກເຊິ່ງຢູ່ໃນຫົວໃຈຂອງພວກເຂົາໃຫ້ກັບພຣະເຈົ້າ. ໃນອະດີດ ຜູ້ຄົນເຫັນພຣະເຈົ້າໃນສະໝອງຂອງພວກເຂົາເປັນຮູບພາບຂອງຊາຕານ, ເປັນພຣະເຈົ້າທີ່ແນມບໍ່ເຫັນ ແລະ ຈັບຕ້ອງບໍ່ໄດ້; ແຕ່ເຖິງຢ່າງນັ້ນ ພວກເຂົາເຊື່ອພຣະເຈົ້າດັ່ງກ່າວນີ້ບໍ່ແມ່ນພຽງແຕ່ມີຕົວຕົນຢູ່ເທົ່ານັ້ນ ແຕ່ສາມາດປະຕິບັດສັນຍານ ແລະ ສິ່ງມະຫັດສະຈັນໃນທຸກຮູບແບບ ແລະ ສາມາດເປີດເຜີຍຄວາມລຶກລັບຫຼາຍຢ່າງ ເຊັ່ນໃບໜ້າທີ່ຂີ້ຮ້າຍຂອງຜູ້ທີ່ຖືກ

ພວກຜີສາດຄອບງຳ. ສິ່ງນີ້ພິສູດໃຫ້ເຫັນຢ່າງຊັດເຈນວ່າ ພຣະເຈົ້າໃນແນວຄິດຂອງຜູ້ຄົນບໍ່ແມ່ນຮູບພາບຂອງພຣະເຈົ້າ ແຕ່ແມ່ນຮູບພາບຂອງບາງສິ່ງທີ່ນອກເໜືອຈາກພຣະເຈົ້າ. ພຣະເຈົ້າໄດ້ເວົ້າວ່າ ພຣະອົງປາດຖະໜາທີ່ຈະອາໄສຢູ່ໃນໃຈຂອງຜູ້ຄົນພຽງ 0.1 ເປີເຊັນ. ນີ້ແມ່ນມາດຕະຖານສູງສຸດ ທີ່ພຣະເຈົ້າຂໍຈາກມະນຸດ. ຢູ່ເໜືອເປືອກນອກຂອງສິ່ງເຫຼົ່ານັ້ນ ກໍຍັງມີດ້ານທີ່ແທ້ຈິງຂອງພຣະທຳເຫຼົ່ານີ້. ຖ້າບໍ່ຖືກອະທິບາຍ ຜູ້ຄົນກໍຈະຄິດວ່າ ຄວາມຕ້ອງການຂອງພຣະເຈົ້າສຳລັບພວກເຂົາແມ່ນຕໍ່າຫຼາຍ ຄືກັບວ່າ ພຣະເຈົ້າໄດ້ເຂົ້າໃຈພວກເຂົາໜ້ອຍທີ່ສຸດ. ນີ້ບໍ່ແມ່ນຄວາມຄິດຂອງມະນຸດບໍ?

ໂດຍຮວມເອົາສິ່ງທີ່ກ່າວມາຂ້າງເທິງ ແລະ ຕົວຢ່າງຂອງເປໂຕຢູ່ດ້ານລຸ່ມ, ຄົນຈະພົບເຫັນວ່າ ເປໂຕຮູ້ຈັກພຣະເຈົ້າດີກວ່າຄົນອື່ນໆຫຼາຍ ເນື່ອງຈາກວ່າ ລາວສາມາດຫັນຫຼັງໃຫ້ພຣະເຈົ້າທີ່ເລື່ອນລອຍ ແລະ ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າແຫ່ງຄວາມເປັນຈິງ. ເປັນຫຍັງຈຶ່ງມີການກ່າວພິເສດກ່ຽວກັບພໍ່ແມ່ຂອງລາວເປັນພວກຜີສາດທີ່ຕໍ່ຕ້ານພຣະເຈົ້າ? ມັນພິສູດໃຫ້ເຫັນວ່າ ເປໂຕບໍ່ໄດ້ສະແຫວງຫາພຣະເຈົ້າໃນໃຈຂອງລາວ. ພໍ່ແມ່ຂອງລາວແມ່ນຕົວແທນຂອງພຣະເຈົ້າທີ່ເລື່ອນລອຍ; ນີ້ແມ່ນສາເຫດທີ່ພຣະເຈົ້າກ່າວເຖິງພວກເຂົາ. ຄົນສ່ວນໃຫຍ່ບໍ່ໃສ່ໃຈກັບຄວາມຈິງນີ້. ກົງກັນຂ້າມ, ພວກເຂົາຕັ້ງໃຈກັບຄຳອະທິຖານຂອງເປໂຕ. ໃນບາງຄົນ, ຄຳອະທິຖານຂອງເປໂຕແມ່ນອອກຈາກປາກຂອງພວກເຂົາຕະຫຼອດ, ຢູ່ໃນໃຈຂອງພວກເຂົາຕະຫຼອດ ແຕ່ພວກເຂົາແມ່ນບໍ່ເຄີຍສົມທຽບພຣະເຈົ້າທີ່ເລື່ອນລອຍກັບຄວາມຮູ້ຂອງເປໂຕເລີຍ. ເປັນຫຍັງເປໂຕຈຶ່ງຕ້ານພໍ່ແມ່ຂອງລາວ ແລະ ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ? ເປັນຫຍັງເປໂຕຈຶ່ງຜັກດັນຕົວເອງດ້ວຍບົດຮຽນຂອງຄົນລົ້ມເຫຼວ? ເປັນຫຍັງລາວຈຶ່ງຮັບເອົາຄວາມເຊື່ອ ແລະ ຄວາມຮັກຂອງທຸກຄົນທີ່ຮັກພຣະເຈົ້າຕະຫຼອດຍຸກຕ່າງໆເຊັ່ນກັນ? ເປໂຕຮູ້ຈັກວ່າ ທຸກສິ່ງທີ່ເປັນບວກແມ່ນມາຈາກພຣະເຈົ້າ ແລະ ອອກຈາກພຣະອົງໂດຍກົງ ໂດຍບໍ່ຖືກຄອບງຳໂດຍຊາຕານ. ນີ້ສະແດງໃຫ້ເຫັນວ່າ ພຣະເຈົ້າທີ່ລາວຮູ້ຈັກແມ່ນພຣະເຈົ້າທີ່ແທ້ຈິງ ແລະ ບໍ່ແມ່ນພຣະເຈົ້າທີ່ເໜືອທຳມະຊາດ. ເປັນຫຍັງຈຶ່ງມີການກ່າວວ່າ ເປໂຕເອົາໃຈໃສ່ກັບການຮັບເອົາຄວາມເຊື່ອ ແລະ ຄວາມຮັກຂອງທຸກຄົນ ທີ່ຮັກພຣະເຈົ້າຕະຫຼອດຍຸກຕ່າງໆເຊັ່ນກັນ? ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ຄວາມລົ້ມເຫຼວຂອງຜູ້ຄົນຕະຫຼອດຍຸກຕ່າງໆ ສ່ວນໃຫຍ່ແລ້ວແມ່ນຍ້ອນວ່າ ພວກເຂົາມີຄວາມເຊື່ອ ແລະ ຄວາມຮັກເທົ່ານັ້ນ ພຽງແຕ່ບໍ່ສາມາດຮູ້ຈັກພຣະເຈົ້າແຫ່ງຄວາມຈິງເທົ່ານັ້ນ. ດ້ວຍເຫດນັ້ນ, ຄວາມເຊື່ອຂອງພວກເຂົາຈຶ່ງເລື່ອນລອຍ. ເປັນຫຍັງພຣະເຈົ້າຈຶ່ງກ່າວເຖິງຄວາມເຊື່ອຂອງໂຢບຫຼາຍຄັ້ງ ໂດຍບໍ່ໄດ້ເວົ້າວ່າ ລາວຮູ້ຈັກພຣະເຈົ້າ ແລະ ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ ໂຢບບໍ່ທຽບເທົ່າກັບເປໂຕ? ຄຳເວົ້າຂອງໂຢບກໍຄື "ຂ້ານ້ອຍໄດ້ຍິນຈາກພຣະອົງດ້ວຍການຟັງ ແຕ່ບັດນີ້ ຕາຂອງຂ້ານ້ອຍເຫັນພຣະອົງແລ້ວ" ເຊິ່ງສະແດງໃຫ້ເຫັນວ່າ ລາວມີແຕ່ຄວາມເຊື່ອ ແລະ ບໍ່ມີຄວາມຮູ້. ຄຳເວົ້າທີ່ວ່າ "ຄວາມຂັດແຍ້ງຂອງພໍ່ແມ່ຂອງເປໂຕໄດ້ມອບຄວາມຮູ້ທີ່ຍິ່ງໃຫຍ່ກ່ຽວກັບຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາໃຫ້ແກ່ລາວ" ມັກຈະກໍ່ເກີດໃຫ້ມີຄຳຖາມຫຼາຍປະການຈາກຄົນສ່ວນໃຫຍ່: ເປັນຫຍັງເປໂຕຈຳເປັນຕ້ອງມີຄວາມຂັດແຍ້ງເພື່ອຮູ້ຈັກພຣະເຈົ້າ? ເປັນຫຍັງລາວບໍ່ສາມາດຮູ້ຈັກພຣະເຈົ້າໂດຍກົງ? ເປັນຫຍັງລາວຈຶ່ງຮູ້ຈັກຄວາມເມດຕາ ແລະ ຄວາມກະລຸນາເທົ່ານັ້ນ

ແລະ ພຣະເຈົ້າບໍ່ໄດ້ເວົ້າກ່ຽວກັບສິ່ງອື່ນໃດເລີຍບໍ? ມະນຸດສາມາດແຕ່ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າແຫ່ງຄວາມຈິງ ຫຼັງຈາກທີ່ພວກເຂົາຮູ້ວ່າພຣະເຈົ້າເລື່ອນລອຍບໍ່ແມ່ນພຣະເຈົ້າແຫ່ງຄວາມເປັນຈິງ; ເປົ້າໝາຍຂອງພຣະທຳເຫຼົ່ານີ້ແມ່ນເພື່ອເຮັດໃຫ້ຜູ້ຄົນຂັບໄລ່ພຣະເຈົ້າເລື່ອນລອຍທີ່ຢູ່ໃນໃຈຂອງພວກເຂົາອອກ. ນັບແຕ່ເວລາແຫ່ງການຊົງສ້າງຈົນຮອດປັດຈຸບັນ, ຖ້າຜູ້ຄົນໄດ້ຮູ້ຈັກໃບໜ້າທີ່ແທ້ຈິງຂອງພຣະເຈົ້າມາຕະຫຼອດ ພວກເຂົາກໍຈະສາມາດຢັ່ງຮູ້ເຖິງການກະທຳຂອງຊາຕານ, ດັ່ງສຸພາສິດຂອງມະນຸດທີ່ວ່າ "ຜູ້ຄົນຈະບໍ່ສັງເກດເຫັນລະດັບຂອງພື້ນດິນຈົນກວ່າພວກເຂົາຈະໄດ້ຂ້າມພູເຂົາ" ເຊິ່ງຄຳສຸພາສິດນີ້ສະແດງໃຫ້ເຫັນເຖິງເຫດຜົນຂອງພຣະເຈົ້າໃນການກ່າວພຣະທຳເຫຼົ່ານີ້. ຍ້ອນພຣະອົງປາດຖະໜາທີ່ຈະເຮັດໃຫ້ຜູ້ຄົນມີຄວາມເຂົ້າໃຈຢ່າງເລິກເຊິ່ງຂຶ້ນກ່ຽວກັບຕົວຢ່າງທີ່ພຣະອົງໄດ້ສະເໜີ, ພຣະເຈົ້າຈຶ່ງເນັ້ນໃສ່ຄວາມເມດຕາ ແລະ ຄວາມກະລຸນາ ເພື່ອພິສູດໃຫ້ເຫັນວ່າ ຍຸກທີ່ເປໂຕອາໄສຢູ່ແມ່ນຍຸກແຫ່ງພຣະຄຸນ. ຈາກອີກທັດສະນະໜຶ່ງກໍຄື, ສິ່ງນີ້ເປີດເຜີຍໂສມໜ້າຂອງມານຮ້າຍທັງໝົດ ເຊິ່ງເປັນຜູ້ທີ່ບໍ່ເຮັດຫຍັງນອກຈາກທຳຮ້າຍ ແລະ ເຮັດໃຫ້ມະນຸດເສື່ອມຊາມ, ເຮັດໃຫ້ຄວາມເມດຕາ ແລະ ຄວາມກະລຸນາຂອງພຣະເຈົ້າຍິ່ງແຕກຕ່າງຫຼາຍຂຶ້ນ.

ພຣະເຈົ້າຍັງກ່າວເຖິງຄວາມຈິງກ່ຽວກັບການທົດລອງຂອງເປໂຕ ແລະ ອະທິບາຍເຖິງສະຖານະການຕົວຈິງຂອງພວກເຂົາ. ບົ່ງບອກເພີ່ມເຕີມໃຫ້ຜູ້ຄົນຮູ້ວ່າ ພຣະເຈົ້າແມ່ນບໍ່ໄດ້ມີແຕ່ຄວາມເມດຕາ ແລະ ຄວາມກະລຸນາເທົ່ານັ້ນ ແຕ່ຍັງມີລິດທານຸພາບ ແລະ ຄວາມໂກດຮ້າຍ ແລະ ຜູ້ທີ່ດຳລົງຊີວິດໃນຄວາມສະຫງົບບໍ່ຈຳເປັນຕ້ອງດຳລົງຊີວິດໃນທ່າມກາງພອນຂອງພຣະເຈົ້າ. ການບອກຜູ້ຄົນກ່ຽວກັບປະສົບການຂອງເປໂຕ ຫຼັງຈາກການທົດລອງຂອງລາວ ແມ່ນຍິ່ງເປັນຫຼັກຖານທີ່ຍິ່ງໃຫຍ່ຂອງຄວາມແທ້ຈິງກ່ຽວກັບພຣະທຳຂອງໂຢບທີ່ວ່າ "ພວກເຮົາຄວນຮັບເອົາແຕ່ສິ່ງທີ່ດີຈາກມືຂອງພຣະອົງບໍ? ແລ້ວສິ່ງທີ່ບໍ່ດີເດພວກເຮົາຈະບໍ່ຮັບເອົາບໍ?" ສະນັ້ນ, ຈຶ່ງມີການສະແດງໃຫ້ເຫັນວ່າ ຄວາມຮູ້ຂອງເປໂຕກ່ຽວກັບພຣະເຈົ້າໄດ້ບັນລຸຂອບເຂດທີ່ບໍ່ເຄີຍມີມາກ່ອນຢ່າງແທ້ຈິງ ນັ້ນກໍຄື ເປັນຂອບເຂດທີ່ບໍ່ມີການບັນລຸໂດຍຜູ້ຄົນຂອງຍຸກຕ່າງໆໃນອະດີດ ເຊິ່ງຍັງເປັນໝາກຜົນຂອງການທີ່ລາວຮັບເອົາຄວາມເຊື່ອ ແລະ ຄວາມຮັກຂອງທຸກຄົນ ທີ່ຮັກພຣະເຈົ້າຕະຫຼອດຍຸກຕ່າງໆ ແລະ ການທີ່ລາວໃຫ້ກຳລັງໃຈຕົວເອງ ໂດຍໃຊ້ບົດຮຽນຂອງຜູ້ຄົນທີ່ໄດ້ລົ້ມເຫຼວໃນອະດີດ. ຍ້ອນເຫດຜົນດັ່ງກ່າວນີ້, ທຸກຄົນທີ່ໄດ້ຮັບຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າຈຶ່ງຖືກເອີ້ນວ່າ "ໝາກຜົນ" ແລະ ນັ້ນແມ່ນຮວມທັງເປໂຕ. ຄຳອະທິຖານຂອງເປໂຕທີ່ມີຕໍ່ພຣະເຈົ້າສະແດງໃຫ້ເຫັນຄວາມຮູ້ທີ່ແທ້ຈິງຂອງພຣະເຈົ້າໃນໄລຍະການທົດລອງຂອງລາວ. ຢ່າງໃດກໍຕາມ, ຂໍ້ເສຍກໍຄືລາວບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ ເຊິ່ງເປັນເຫດຜົນທີ່ວ່າ ເປັນຫຍັງພຣະເຈົ້າຈຶ່ງຂໍ "ອາໄສຢູ່ໃນໃຈຂອງມະນຸດພຽງ 0.1 ເປີເຊັນ" ເທົ່ານັ້ນ ບົນພື້ນຖານຂອງຄວາມຮູ້ຂອງເປໂຕກ່ຽວກັບພຣະອົງ. ແມ່ນແຕ່ເປໂຕ ເຊິ່ງເປັນຄົນທີ່ຮູ້ຈັກພຣະເຈົ້າດີທີ່ສຸດ ຍັງບໍ່ສາມາດເຂົ້າໃຈໄດ້ຢ່າງຖືກຕ້ອງເຖິງຄວາມປະສົງຂອງພຣະເຈົ້າ ສະແດງໃຫ້ເຫັນວ່າ ມະນຸດຂາດຄວາມສາມາດໃນການຮູ້ຈັກພຣະເຈົ້າ ເນື່ອງຈາກພວກເຂົາຖືກຊາຕານເຮັດໃຫ້ເສື່ອມຊາມ; ນີ້ເຮັດໃຫ້ທຸກຄົນຮູ້ຈັກແກ່ນແທ້ຂອງຕົນເອງ. ສອງເງື່ອນໄຂເຫຼົ່ານີ້ ນັ້ນກໍຄື ການທີ່ຜູ້ຄົນຂາດຄວາມ

ສາມາດໃນການຮູ້ຈັກພຣະເຈົ້າ ແລະ ການທີ່ພວກເຂົາຖືກແຊກຊຶມໂດຍຊາຕານຢ່າງສົມບູນ ແມ່ນສິ່ງທີ່ຂັດຂວາງອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ ເນື່ອງຈາກວ່າ ພຣະເຈົ້າເຮັດພາລະກິດດ້ວຍພຣະທຳເທົ່ານັ້ນ, ພຣະອົງບໍ່ຮັບເອົາກິດຈະການໃດໆ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງຢູ່ໃນພື້ນທີ່ອັນແນ່ນອນໃນຫົວໃຈຂອງຜູ້ຄົນ. ແຕ່ເປັນຫຍັງຜູ້ຄົນຈຶ່ງຕ້ອງການບັນລຸພຽງແຕ່ 0.1 ເປີເຊັນເທົ່ານັ້ນເພື່ອຕອບສະໜອງຄວາມປະສົງຂອງພຣະເຈົ້າ? ສິ່ງນີ້ສາມາດອະທິບາຍໂດຍພຣະເຈົ້າວ່າ ເປັນຫຍັງຈຶ່ງບໍ່ໄດ້ສ້າງຄວາມສາມາດນີ້ໃນມະນຸດ. ການຂາດຄວາມສາມາດນີ້, ຖ້າມະນຸດໄດ້ມີຄວາມຮູ້ກ່ຽວກັບພຣະເຈົ້າຮອດ 100 ເປີເຊັນ ທຸກການເຄື່ອນໄຫວຂອງພຣະເຈົ້າກໍຈະແຈ່ມແຈ້ງຄືກັບກາງເວັນສຳລັບພວກເຂົາ ແລະ ເນື່ອງຈາກທຳມະຊາດຂອງມຸດ ຜູ້ຄົນຈຶ່ງກະບົດຕໍ່ພຣະເຈົ້າທັນທີ, ພວກເຂົາຈະຢືນຂຶ້ນ ແລະ ຕໍ່ຕ້ານພຣະອົງຢ່າງເປີດເຜີຍ ເຊິ່ງນັ້ນຄືຄວາມຮູ້ສຶກຂອງຊາຕານ. ສະນັ້ນ ພຣະເຈົ້າຈຶ່ງບໍ່ເຄີຍປະໝາດມະນຸດ ເນື່ອງຈາກເຫດຜົນທີ່ວ່າ ພຣະອົງໄດ້ວິເຄາະພວກເຂົາຢ່າງລະອຽດແລ້ວ ແລະ ຮູ້ຈັກທຸກສິ່ງກ່ຽວກັບພວກເຂົາດ້ວຍຄວາມແຈ່ມແຈ້ງທີ່ສຸດ ຈົນເຖິງຈຸດທີ່ວ່າ ມີນໍ້າໃນເລືອດຂອງພວກເຂົາຫຼາຍປານໃດກັນແທ້. ແລ້ວທຳມະຊາດຂອງຄວາມເປັນມະນຸດຈະເປັນແບບນັ້ນໄປອີກດົນປານໃດສຳລັບພຣະອົງ? ພຣະເຈົ້າບໍ່ເຄີຍເຮັດຜິດພາດ ແລະ ພຣະອົງເລືອກພຣະທຳຈາກພຣະວັດຈະນະຂອງພຣະອົງດ້ວຍຄວາມແນ່ນອນທີ່ສຸດ. ສະນັ້ນ ຈຶ່ງບໍ່ມີຂໍ້ຂັດແຍ້ງລະຫວ່າງການທີ່ເປໂຕບໍ່ມີຄວາມເຂົ້າໃຈຢ່າງຖືກຕ້ອງກ່ຽວກັບຄວາມປະສົງຂອງພຣະເຈົ້າ ແລະ ການທີ່ລາວມີຄວາມຮູ້ຫຼາຍທີ່ສຸດກ່ຽວກັບພຣະເຈົ້າ; ຍິ່ງໄປກວ່ານັ້ນ ທັງສອງແມ່ນບໍ່ກ່ຽວຂ້ອງກັນຢ່າງສິ້ນເຊີງ. ການທີ່ພຣະເຈົ້າຍົກເລື່ອງຂອງລາວມາເປັນຕົວຢ່າງ ບໍ່ແມ່ນເພື່ອສຸມໃສ່ຄວາມສົນໃຈຂອງຜູ້ຄົນກັບເປໂຕ. ເປັນຫຍັງຄົນຄືໂຢບຈຶ່ງບໍ່ສາມາດຮູ້ຈັກພຣະເຈົ້າ ແຕ່ເປໂຕພັດສາມາດ? ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ ມະນຸດສາມາດໄດ້ຮັບສິ່ງນີ້ ແຕ່ເວົ້າອີກວ່າ ມັນຂຶ້ນຢູ່ກັບອຳນາດທີ່ຍິ່ງໃຫຍ່ຂອງພຣະອົງ? ຜູ້ຄົນມີຄວາມດີໂດຍທຳມະຊາດແທ້ບໍ? ສິ່ງນີ້ແມ່ນບໍ່ງ່າຍທີ່ຈະໃຫ້ຜູ້ຄົນຮູ້ຈັກ; ບໍ່ມີໃຜຈະຮູ້ເຖິງຄວາມໝາຍພາຍໃນສິ່ງນີ້ ຖ້າເຮົາບໍ່ເວົ້າເຖິງມັນ. ເປົ້າໝາຍຂອງພຣະທຳເຫຼົ່ານີ້ກໍເພື່ອມອບການຢັ່ງຮູ້ໃຫ້ແກ່ຜູ້ຄົນ ເພື່ອວ່າ ພວກເຂົາຈະສາມາດມີຄວາມເຊື່ອໃນການຮ່ວມມືກັບພຣະເຈົ້າ. ພຽງເມື່ອນັ້ນ ພຣະເຈົ້າຈຶ່ງຈະເຮັດພາລະກິດດ້ວຍການຮ່ວມມືຈາກມະນຸດ. ນັ້ນແມ່ນສະຖານະການຕົວຈິງໃນໂລກແຫ່ງວິນຍານ ແລະ ມະນຸດບໍ່ສາມາດຢັ່ງເຖິງໄດ້ຢ່າງສິ້ນເຊີງ. ການກຳຈັດພື້ນທີ່ຂອງຊາຕານອອກຈາກຫົວໃຈຂອງມະນຸດ ແລະ ການມອບສິ່ງນັ້ນໃຫ້ແກ່ພຣະເຈົ້າແທນ ນີ້ຄືຄວາມໝາຍຂອງການຕອບໂຕ້ການໂຈມຕີຂອງຊາຕານ ແລະ ພຽງເມື່ອນັ້ນ ມັນຈຶ່ງສາມາດເວົ້າໄດ້ວ່າ ພຣະຄຣິດໄດ້ລົງມາເທິງແຜ່ນດິນໂລກ ແລະ ພຽງເມື່ອນັ້ນ ມັນຈຶ່ງສາມາດເວົ້າໄດ້ວ່າ ອານາຈັກເທິງແຜ່ນດິນໂລກໄດ້ກາຍເປັນອານາຈັກຂອງພຣະຄຣິດແລ້ວ.

ໃນຈຸດນີ້, ການກ່າວເຖິງການເປັນແບບຢ່າງ ແລະ ຕົວຢ່າງຂອງເປໂຕເປັນເວລາຫຼາຍພັນປີບໍ່ແມ່ນເພື່ອເວົ້າວ່າ ລາວເປັນຕົວແທນ ແລະ ຕົວຢ່າງເທົ່ານັ້ນ; ພຣະທຳເຫຼົ່ານີ້ແມ່ນສິ່ງສະທ້ອນເຖິງການຕໍ່ສູ້ໃນໂລກແຫ່ງວິນຍານ. ຊາຕານໄດ້ເຮັດພາລະກິດໃນມະນຸດຕະຫຼອດເວລາ ໂດຍມີຄວາມຫວັງຈະກືນກິນມະນຸດຢ່າງໄຮ້ປະໂຫຍດ, ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ພຣະເຈົ້າທຳລາຍໂລກ ແລະ ສູນເສຍ

ພະຍານຂອງພຣະອົງ. ແຕ່ພຣະເຈົ້າກໍໄດ້ເວົ້າວ່າ "ກ່ອນອື່ນໝົດ ເຮົາຈະສ້າງຕົວຢ່າງ ເພື່ອວ່າ ເຮົາອາດຈະໄດ້ຮັບຕຳແໜ່ງນ້ອຍທີ່ສຸດພາຍໃນໃຈຂອງມະນຸດ. ໃນຂັ້ນຕອນນີ້, ມວນມະນຸດບໍ່ໄດ້ເຮັດໃຫ້ເຮົາພໍໃຈ ຫຼື ຮູ້ຈັກເຮົາຢ່າງຄົບຖ້ວນ; ຢ່າງໃດກໍຕາມ, ຍ້ອນອຳນາດທີ່ຍິ່ງໃຫຍ່ຂອງເຮົາ ມະນຸດຈະໄດ້ອ່ອນນ້ອມຕໍ່ເຮົາຢ່າງສິ້ນເຊີງ ແລະ ຢຸດກະບົດຕໍ່ເຮົາ ແລະ ເຮົາຈະໃຊ້ນີ້ເປັນຕົວຢ່າງໃນການປາບຊາຕານ. ໝາຍຄວາມວ່າ ເຮົາຈະໃຊ້ 0.1 ເປີເຊັນຂອງຫົວໃຈຂອງມະນຸດທີ່ເຮົາໄດ້ອາໄສຢູ່ ເພື່ອປາບທຸກກອງກຳລັງທີ່ຊາຕານໄດ້ບຸກໂຈມຕີມວນມະນຸດຊາດ". ດັ່ງນັ້ນ ມື້ນີ້ພຣະເຈົ້າກ່າວເຖິງເປໂຕເປັນຕົວຢ່າງ ເພື່ອວ່າ ລາວອາດຈະຖືກໃຊ້ເປັນແມ່ແບບສຳລັບມະນຸດທຸກຄົນ ເພື່ອເອົາເປັນແບບຢ່າງ ແລະປະຕິບັດຕາມ. ເມື່ອປະກອບກັບບົດທຳອິດທີ່ກ່າວມາຂ້າງເທິງ, ສິ່ງນີ້ສະແດງໃຫ້ເຫັນເຖິງຄວາມສາມາດທີ່ພຣະເຈົ້າກ່າວ ກ່ຽວກັບສະຖານະການໃນໂລກແຫ່ງວິນຍານ: "ປັດຈຸບັນແມ່ນບໍ່ຄືກັນກັບອະດີດ: ເຮົາຈະເຮັດໃນສິ່ງທີ່ບໍ່ເຄີຍເຫັນມາກ່ອນນັບແຕ່ເວລາຂອງການຊົງສ້າງ, ເຮົາຈະກ່າວພຣະທຳທີ່ບໍ່ມີໃຜເຄີຍໄດ້ຍິນມາກ່ອນຕະຫຼອດຍຸກຕ່າງໆ ເພາະວ່າ ເຮົາຂໍໃຫ້ທຸກຄົນມາຮູ້ຈັກເຮົາໃນເນື້ອໜັງ". ຈາກສິ່ງນີ້ ມັນພິສູດໃຫ້ເຫັນວ່າ ພຣະເຈົ້າໄດ້ເລີ່ມດຳເນີນການກັບພຣະທຳຂອງພຣະອົງໃນປັດຈຸບັນ. ຜູ້ຄົນສາມາດເຫັນສິ່ງທີ່ເກີດຂຶ້ນຢູ່ພາຍນອກເທົ່ານັ້ນ, ພວກເຂົາບໍ່ສາມາດເຫັນສິ່ງທີ່ເກີດຂຶ້ນຢ່າງແທ້ຈິງໃນໂລກແຫ່ງວິນຍານ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າໂດຍກົງວ່າ "ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຂອງການຄຸ້ມຄອງຂອງເຮົາ, ແຕ່ມະນຸດບໍ່ມີຄວາມສົງໄສແມ່ນແຕ່ໜ້ອຍດຽວ. ເຖິງວ່າ ເຮົາຈະໄດ້ເວົ້າແບບທຳມະດາ ແຕ່ຜູ້ຄົນກໍຍັງສັບສົນ; ມັນຍາກທີ່ຈະເຮັດໃຫ້ພວກເຂົາເຂົ້າໃຈ. ນີ້ບໍ່ແມ່ນຄວາມຕໍ່າຕ້ອຍຂອງມະນຸດບໍ?" ມີພຣະທຳພາຍໃນພຣະທຳເຫຼົ່ານີ້: ສິ່ງເຫຼົ່ານັ້ນຊີ້ໃຫ້ເຫັນວ່າ ກຳລັງມີການຕໍ່ສູ້ໃນໂລກແຫ່ງວິນຍານ ຕາມທີ່ໄດ້ອະທິບາຍມາຂ້າງເທິງ.

ຄວາມປະສົງຂອງພຣະເຈົ້າແມ່ນບໍ່ໄດ້ຖືກບັນລຸທັງໝົດ ຫຼັງຈາກການອະທິບາຍສັ້ນໆຂອງພຣະອົງກ່ຽວກັບເລື່ອງລາວຂອງເປໂຕ ດັ່ງນັ້ນ ພຣະເຈົ້າຈຶ່ງເຮັດການຮຽກຮ້ອງກ່ຽວກັບເລື່ອງຂອງເປໂຕດັ່ງລຸ່ມນີ້: "ຕະຫຼອດທົ່ວຈັກກະວານ ແລະ ທ້ອງຟ້າໃນທ່າມກາງທຸກສິ່ງໃນສະຫວັນ ແລະ ເທິງແຜ່ນດິນໂລກ, ທຸກສິ່ງຢູ່ເທິງແຜ່ນດິນໂລກ ແລະ ໃນສະຫວັນແມ່ນໄດ້ມອບຄວາມພະຍາຍາມທັງໝົດຂອງພວກເຂົາເພື່ອຂັ້ນຕອນສຸດທ້າຍຂອງພາລະກິດຂອງເຮົາ. ແນ່ນອນ ພວກເຈົ້າຄົງບໍ່ປາດຖະໜາທີ່ຈະເປັນຜູ້ຊົມ ທີ່ຖືກສັ່ງການໄປມາໂດຍກອງກຳລັງຂອງ ຊາຕານແມ່ນບໍ?" ຜູ້ຄົນແມ່ນໄດ້ຮັບແສງສະຫວ່າງຢ່າງເລິກເຊິ່ງຫຼັງຈາກອ່ານກ່ຽວກັບຄວາມຮູ້ຂອງເປໂຕ ແລະ ເພື່ອໃຫ້ມີປະສິດທິພາບຫຼາຍກວ່າເກົ່າ ພຣະເຈົ້າໄດ້ສະແດງໃຫ້ຜູ້ຄົນເຫັນຜົນຮັບຂອງການມືດມົວ, ການບໍ່ຈຳກັດ ແລະ ການຂາດຄວາມຮູ້ກ່ຽວກັບພຣະເຈົ້າຂອງພວກເຂົາ; ຍິ່ງໄປກວ່ານັ້ນ ດ້ວຍຄວາມແນ່ນອນ ພຣະອົງໄດ້ບອກມວນມະນຸດອີກຄັ້ງກ່ຽວກັບສິ່ງທີ່ເກີດຂຶ້ນຢ່າງແທ້ຈິງໃນການຕໍ່ສູ້ໃນໂລກແຫ່ງວິນຍານ. ດ້ວຍເຫດນັ້ນ ຜູ້ຄົນຈຶ່ງລະມັດລະວັງຫຼາຍຂຶ້ນຕໍ່ການຖືກຊາຕານເອົາໄປ. ຍິ່ງໄປກວ່ານັ້ນ, ມັນຊັດເຈນວ່າ ຖ້າຜູ້ຄົນລົ້ມໃນຄັ້ງນີ້ພວກເຂົາກໍຈະບໍ່ຖືກພຣະເຈົ້າຊ່ວຍຄືກັນກັບຄັ້ງຜ່ານມາ. ເມື່ອໄດ້ອ່ານຮ່ວມກັນ, ຄຳເຕືອນເຫຼົ່ານີ້ເຮັດໃຫ້ຄວາມປະທັບໃຈຂອງມະນຸດທີ່ມີຕໍ່ພຣະທຳຂອງພຣະເຈົ້າເລິກເຊິ່ງຂຶ້ນ, ພວກມັນເຮັດໃຫ້ຜູ້ຄົນເຫັນ

ເຖິງຄຸນຄ່າຄວາມເມດຕາຂອງພຣະເຈົ້າຫຼາຍຂຶ້ນ ແລະ ທະນຸຖະໜອມພຣະທຳແຫ່ງການເຕືອນຂອງພຣະເຈົ້າ ເພື່ອວ່າ ເປົ້າໝາຍຂອງພຣະເຈົ້າໃນການຊ່ວຍມະນຸດຊາດໃຫ້ລອດພົ້ນຈະສາມາດບັນລຸໄດ້ຢ່າງແທ້ຈິງ.

# ກ່ຽວກັບຊີວິດຂອງເປໂຕ

ເປໂຕເປັນແບບຢ່າງຂອງພຣະເຈົ້າສຳລັບມະນຸດຊາດ, ດວງປະທີບທີ່ເປັນທີ່ຮູ້ຈັກສຳລັບທຸກຄົນ. ເປັນຫຍັງຄົນໜຶ່ງທີ່ບໍ່ໂດດເດັ່ນແບບນັ້ນຈຶ່ງຖືກຍົກຂຶ້ນໃຫ້ເປັນຕົວຢ່າງໂດຍພຣະເຈົ້າ ແລະ ຖືກຍົກຍ້ອງໂດຍຄົນຮຸ່ນຕໍ່ມາ? ແນ່ນອນ ສິ່ງນີ້ບໍ່ສາມາດແຍກອອກໄດ້ຈາກຄຳເວົ້າແຫ່ງຄວາມຮັກຂອງລາວສຳລັບພຣະເຈົ້າ ແລະ ຄວາມຕັ້ງໃຈທີ່ຈະຮັກພຣະເຈົ້າ. ສຳລັບວິທີການສຳແດງຫົວໃຈແຫ່ງຄວາມຮັກຂອງເປໂຕຕໍ່ພຣະເຈົ້າ ແລະ ປະສົບການໃນຊີວິດຂອງລາວເປັນແນວໃດແທ້ໆ, ພວກເຮົາຕ້ອງກັບໄປທີ່ຍຸກແຫ່ງພຣະຄຸນເພື່ອເບິ່ງປະເພນີໃນເວລານັ້ນ ແລະ ສັງເກດເບິ່ງເປໂຕໃນຍຸກນັ້ນ.

ເປໂຕເກີດໃນຄົວເຮືອນຊາວນາທີ່ເປັນຄົນຍືວທຳມະດາ. ພໍ່ແມ່ຂອງລາວລ້ຽງດູໝົດຄອບຄົວໂດຍການເຮັດນາ ແລະ ລາວເປັນລູກກົກ ໂດຍມີອ້າຍເອື້ອຍນ້ອງສີ່ຄົນ. ແນ່ນອນ ນີ້ບໍ່ແມ່ນສ່ວນຫຼັກຂອງເລື່ອງລາວຂອງພວກເຮົາ; ເປໂຕເປັນຕົວລະຄອນຫຼັກຂອງພວກເຮົາ. ເມື່ອລາວອາຍຸຫ້າປີ, ພໍ່ແມ່ຂອງເປໂຕກໍ່ເລີ່ມສັ່ງສອນລາວໃຫ້ອ່ານ. ໃນເວລານັ້ນ, ຄົນຢິວຂ້ອນຂ້າງມີຄວາມຮູ້ສູງ ແລະ ກ້າວໜ້າເປັນພິເສດໃນຂະແໜງການຕ່າງໆ ເຊັ່ນ: ກະສິກຳ, ອຸດສາຫະກຳ ແລະ ການຄ້າ. ຜົນຕາມມາຂອງສະພາບແວດລ້ອມສັງຄົມຂອງພວກເຂົາກໍ່ຄື ທັງພໍ່ແມ່ຂອງເປໂຕໄດ້ຮັບການສຶກສາສູງ. ເຖິງແມ່ນວ່າຈະມາຈາກຊົນນະບົດ, ພວກເຂົາກໍ່ມີການສຶກສາດີ ແລະ ສາມາດປຽບທຽບໄດ້ກັບນັກສຶກສາມະຫາວິທະຍາໄລໃນປັດຈຸບັນ. ເຫັນໄດ້ຢ່າງຊັດເຈນວ່າ ເປໂຕໄດ້ຮັບພອນໃຫ້ເກີດໃນສະພາບສັງຄົມທີ່ເອື້ອອຳນວຍແບບນັ້ນ. ດ້ວຍຄວາມສະຫຼາດ ແລະ ຄວາມເຂົ້າໃຈໄວ, ລາວກໍ່ໄດ້ຊຶມຊັບແນວຄິດໃໝ່ແລ້ວ. ຫຼັງຈາກທີ່ໄດ້ເລີ່ມການສຶກສາຂອງລາວ, ລາວກໍ່ຄິດສິ່ງຕ່າງໆທີ່ຢູ່ໃນຊົ່ວໂມງຮຽນອອກຢ່າງງ່າຍດາຍຫຼາຍ. ພໍ່ແມ່ຂອງລາວພູມໃຈທີ່ມີລູກຊາຍສະຫຼາດແບບນັ້ນ ແລະ ພະຍາຍາມທຸກຢ່າງເພື່ອເຮັດໃຫ້ລາວໄດ້ໄປໂຮງຮຽນ ໂດຍຫວັງວ່າລາວຈະສາມາດເຮັດໃຫ້ຕົນເອງໂດດເດັ່ນ ແລະ ຮັບເອົາຕຳແໜ່ງທາງການບາງຢ່າງໃນສັງຄົມ. ໂດຍບໍ່ຮູ້ຕົວ, ເປໂຕໄດ້ເລີ່ມສົນໃຈໃນພຣະເຈົ້າ ເຊິ່ງໝາຍຄວາມວ່າ ເມື່ອອາຍຸສິບສີ່ປີ, ເມື່ອລາວກຳລັງສຶກສາໃນມັດທະຍົມຕອນປາຍ, ລາວກໍ່ເລີ່ມເບື່ອກັບຫຼັກສູດວັດທະນະທຳເກຣັກບູຮານທີ່ລາວກຳລັງສຶກສາ, ໂດຍສະເພາະກ່ຽວກັບຄົນທີ່ປັ້ນແຕ່ງຂຶ້ ແລະເຫດການທີ່ສ້າງຂຶ້ນໃນປະຫວັດສາດເກຣັກບູຮານ. ນັບຕັ້ງແຕ່ນັ້ນມາ, ເປໂຕທີ່ຫາກໍ່ເຂົ້າສູ່ຊ່ວງໄວໜຸ່ມຂອງລາວ ກໍ່ເລີ່ມພະຍາຍາມຄົ້ນຫາເພີ່ມເຕີມກ່ຽວກັບຊີວິດມະນຸດ ແລະ ໂລກທີ່ກວ້າງຂຶ້ນ. ຄວາມສຳນຶກຂອງລາວບໍ່ໄດ້ບັງຄັບໃຫ້ລາວຕອບແທນຄວາມເຈັບປວດທີ່ພໍ່ແມ່ຂອງລາວໄດ້ຮັບ, ເພາະລາວເຫັນໄດ້ຢ່າງຊັດເຈນວ່າທຸກຄົນດຳລົງຊີວິດຢູ່ໃນສະພາວະທີ່ຫຼອກລວງຕົນເອງ, ພວກເຂົາທຸກຄົນດຳລົງຊີວິດຢູ່ພາຍໃນຊີວິດທີ່ໄຮ້ຄວາມໝາຍ, ທຳລາຍຊີວິດຂອງພວກເຂົາເອງໃນການດີ້ນຮົນຫາຄວາມຮັ່ງມີ ແລະ ການຍອມຮັບ. ຄວາມເຂົ້າໃຈຂອງລາວກ່ຽວຂ້ອງກັບສະພາບແວດລ້ອມທີ່ລາວອາໄສຢູ່ເປັນສ່ວນໃຫຍ່. ຍິ່ງຜູ້ຄົນມີຄວາມຮູ້ຫຼາຍສໍ່າໃດ, ຄວາມສຳພັນລະຫວ່າງບຸກຄົນຂອງພວກເຂົາ ແລະໂລກພາຍໃນກໍ່ຍິ່ງຊັບຊ້ອນຂຶ້ນສໍ່ານັ້ນ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຍິ່ງຢູ່ໃນຄວາມວ່າງເປົ່າຫຼາຍຂຶ້ນ.

ພາຍໃຕ້ສະຖານະການເຫຼົ່ານີ້, ເປໂຕໄດ້ໃຊ້ເວລາວ່າງຂອງລາວເພື່ອຢ້ຽມຢາມຫຼາຍບ່ອນ ເຊິ່ງສ່ວນໃຫຍ່ແມ່ນການຢ້ຽມຢາມບຸກຄົນທາງສາສະໜາ. ໃນຫົວໃຈຂອງລາວ, ມັນເບິ່ງຄືກັບວ່າມີຄວາມຮູ້ສຶກທີ່ບໍ່ຊັດເຈນທີ່ວ່າສາສະໜາອາດສາມາດມີສ່ວນສຳລັບທຸກສິ່ງທີ່ບໍ່ສາມາດອະທິບາຍໄດ້ໃນໂລກມະນຸດ ແລະ ດ້ວຍເຫດນັ້ນ ລາວຈຶ່ງມັກໄປທຳມະສາລາທີ່ຢູ່ໃກ້ຄຽງເພື່ອເຂົ້າຮ່ວມການບໍລິການ. ພໍ່ແມ່ຂອງລາວບໍ່ຮູ້ເລື່ອງນີ້ ແລະ ຕໍ່ມາບໍ່ດົນ ເປໂຕທີ່ມີລັກສະນະນິໄສດີ ແລະ ການສຶກສາທີ່ດີຢູ່ສະເໝີ ກໍ່ເລີ່ມກຽດຊັງການໄປໂຮງຮຽນ. ພາຍໃຕ້ການກຳກັບຂອງພໍ່ແມ່ຂອງລາວ, ລາວເກືອບບໍ່ສຳເລັດການສຶກສາມັດທະຍົມຕອນປາຍ. ເມື່ອລອຍນ້ຳເຂົ້າຝັ່ງຈາກມະຫາສະໝຸດແຫ່ງຄວາມຮູ້, ລາວໄດ້ຫາຍໃຈເຂົ້າເລິກໆ; ຫຼັງຈາກນັ້ນເປັນຕົ້ນມາ, ບໍ່ມີຜູ້ໃດຈະອົບຮົມ ຫຼື ຈຳກັດລາວອີກຕໍ່ໄປ.

ຫຼັງຈາກທີ່ສຳເລັດການສຶກສາໃນໂຮງຮຽນ, ລາວກໍ່ເລີ່ມອ່ານໜັງສືທຸກປະເພດ, ແຕ່ເມື່ອອາຍຸສິບເຈັດປີ, ລາວຍັງບໍ່ມີປະສົບການຫຼາຍກ່ຽວກັບໂລກທີ່ກວ້າງຂຶ້ນ. ຫຼັງຈາກທີ່ສຳເລັດການສຶກສາຈາກໂຮງຮຽນ, ລາວກໍ່ລ້ຽງດູຕົນເອງໂດຍການເຮັດນາ ໃນຂະນະທີ່ຫາເວລາໃຫ້ຫຼາຍເທົ່າທີ່ລາວສາມາດເຮັດໄດ້ເພື່ອອ່ານໜັງສື ແລະ ເຂົ້າຮ່ວມການບໍລິການທາງສາສະໜາ. ພໍ່ແມ່ຂອງລາວທີ່ມີຄວາມຄາດຫວັງສູງສຳລັບລາວ ກໍ່ມັກສາບແຊ່ງສະຫວັນຍ້ອນ "ລູກຊາຍທີ່ກະບົດ" ຂອງພວກເຂົາ, ແມ່ນແຕ່ສິ່ງນີ້ກໍ່ບໍ່ສາມາດຂັດຂວາງຫົນທາງທີ່ລາວຫິວ ແລະ ກະຫາຍຫາຄວາມຊອບທຳໄດ້. ເປໂຕບໍ່ໄດ້ທົນທຸກກັບຄວາມລົ້ມເຫຼວຈຳນວນໜ້ອຍໃນປະສົບການຂອງລາວ, ແຕ່ລາວມີຫົວໃຈທີ່ຫິວກະຫາຍ ແລະ ລາວເລີ່ມເຕີບໃຫຍ່ຄືກັບຫຍ້າທີ່ເກີດຫຼັງຈາກຝົນຕົກ. ຕໍ່ມາບໍ່ດົນ, ລາວກໍ່ "ໂຊກດີ" ພໍທີ່ຈະພົບພໍ້ບຸກຄົນອະວຸໂສບາງຄົນໃນໂລກສາສະໜາ ແລະ ເພາະຄວາມປາຖະໜາຂອງລາວມີຫຼາຍ, ລາວຈຶ່ງເລີ່ມຮ່ວມສະມາຄົມກັບພວກເຂົາຫຼາຍຂຶ້ນເລື້ອຍໆ ຈົນລາວໃຊ້ເວລາເກືອບທັງໝົດຂອງລາວຢູ່ກັບພວກເຂົາ. ເມື່ອແຊກຊຶມກັບຄວາມສຸກທີ່ພໍໃຈ, ລາວກໍ່ຮັບຮູ້ໃນທັນທີວ່າ ຄົນສ່ວນໃຫຍ່ເຫຼົ່ານີ້ເຊື່ອດ້ວຍປາກຂອງພວກເຂົາ ແລະ ພວກເຂົາບໍ່ໄດ້ມອບຫົວໃຈຂອງພວກເຂົາໃຫ້ແກ່ຄວາມເຊື່ອຂອງພວກເຂົາ. ເປໂຕຜູ້ທີ່ມີວິນຍານທີ່ທ່ຽງທຳ ແລະ ບໍລິສຸດຈະສາມາດອົດກັ້ນຕໍ່ການໂຈມຕີດັ່ງກ່າວໄດ້ແນວໃດ? ລາວຮັບຮູ້ວ່າເກືອບທັງໝົດຂອງຄົນທີ່ລາວໄດ້ຮ່ວມສະມາຄົມນຳເປັນສັດຮ້າຍໃນເສື້ອຜ້າຂອງມະນຸດ, ພວກເຂົາເປັນສັດທີ່ມີໃບໜ້າຂອງມະນຸດ. ໃນເວລານັ້ນ, ເປໂຕໄຮ້ດຽງສາຫຼາຍ, ສະນັ້ນ ໃນໂອກາດຫຼາຍຄັ້ງ ລາວຈຶ່ງອ້ອນວອນກັບພວກເຂົາຈາກຫົວໃຈ. ແຕ່ບຸກຄົນທາງສາສະໜາທີ່ມີເລ່ຫຼ່ຽມ ແລະ ຫຼອກລວງເຫຼົ່ານີ້ຈະຮັບຟັງການອ້ອນວອນຂອງຄົນໜຸ່ມນ້ອຍທີ່ກະຕືລືລົ້ນຄົນນີ້ໄດ້ແນວໃດ? ມັນເປັນເວລານີ້ເອງທີ່ເປໂຕຮູ້ສຶກເຖິງຄວາມວ່າງເປົ່າທີ່ແທ້ຈິງໃນຊີວິດຂອງມະນຸດ: ໃນບາດກ້າວທຳອິດໃນຂັ້ນຕອນຂອງຊີວິດ, ລາວໄດ້ລົ້ມເຫຼວ... ໜຶ່ງປີຕໍ່ມາ, ລາວໄດ້ຍ້າຍອອກຈາກທຳມະສາລາ ແລະ ເລີ່ມດຳລົງຊີວິດຢ່າງເປັນອິດສະຫຼະ.

ຄວາມລົ້ມເຫຼວໄດ້ເຮັດໃຫ້ເປໂຕທີ່ອາຍຸ 18 ປີ ເປັນຜູ້ໃຫຍ່ ແລະ ມີຄວາມຊຳນານຫຼາຍຂຶ້ນ. ບໍ່ມີຮ່ອງຮອຍຄວາມໄຮ້ດຽງສາແບບໄວໜຸ່ມຂອງລາວຫຼົງເຫຼືອຢູ່; ຄວາມໄຮ້ດຽງສາ ແລະ ຄວາມບໍ່ມີສິລະປະຂອງໄວໜຸ່ມໄດ້ຖືກປົກປິດແໜ້ນດ້ວຍຄວາມລົ້ມເຫຼວທີ່ລາວໄດ້ທົນທຸກ ແລະ ລາວເລີ່ມຊີວິດ

ໃໝ່ໃນຖານະຊາວປະມົງ. ສະນັ້ນຈຶ່ງຈະເຫັນຜູ້ຄົນຮັບຟັງເຂົາເທດສະໜາເທິງເຮືອຂອງລາວ. ໃນຂະນະທີ່ລາວຫາລ້ຽງຊີບດ້ວຍການຫາປາ, ລາວກໍ່ຈະເຜີຍແຜ່ຂໍ້ຄວາມຢູ່ບ່ອນໃດກໍ່ຕາມທີ່ລາວໄປ ແລະ ທຸກຄົນທີ່ໄດ້ຍິນລາວເທດສະໜາກໍ່ຕົກຕະລຶງໃນຄຳເທດສະໜາຂອງລາວ, ຍ້ອນສິ່ງທີ່ລາວເວົ້າໄດ້ກະຕຸ້ນຫົວໃຈຂອງຄົນສາມັນ ແລະ ພວກເຂົາທຸກຄົນກໍ່ຖືກດົນບັນດານໂດຍຄວາມຊື່ສັດຂອງລາວຫຼາຍ. ລາວມັກສັ່ງສອນຜູ້ຄົນໃຫ້ປະຕິບັດຕໍ່ຄົນຈາກຫົວໃຈ, ເອີ້ນຫາຜູ້ມີອຳນາດສູງສຸດແຫ່ງສະຫວັນ ແລະ ແຜ່ນດິນໂລກ ແລະ ສິ່ງທັງປວງ ແລະ ບໍ່ເມີນເສີຍຕໍ່ຄວາມສຳນຶກຂອງພວກເຂົາ ແລະ ບໍ່ເຮັດສິ່ງທີ່ເປັນຕາອັບອາຍ, ເຮັດທຸກສິ່ງໃຫ້ເປັນທີ່ພໍໃຈພຣະເຈົ້າທີ່ພວກເຂົາຮັກໃນຫົວໃຈຂອງພວກເຂົາ... ຜູ້ຄົນມັກຖືກສຳຜັດຫຼັງຈາກທີ່ໄດ້ຍິນຄຳເທດສະໜາຂອງລາວ; ພວກເຂົາທຸກຄົນຮູ້ສຶກໄດ້ຮັບແຮງກະຕຸ້ນຈາກລາວ ແລະ ກໍ່ຖືກດົນບັນດານຈົນຮ້ອງໄຫ້ຢູ່ເລື້ອຍໆ. ໃນເວລານັ້ນ, ລາວເປັນທີ່ຍົກຍ້ອງຫຼາຍໂດຍທຸກຄົນທີ່ເປັນຜູ້ຕິດຕາມລາວ, ຜູ້ເຊິ່ງລ້ວນແລ້ວແຕ່ເປັນຄົນທຸກຍາກ ແລະ ມີຈຳນວນໜ້ອຍໂດຍທຳມະຊາດ ເນື່ອງຈາກລັກສະນະຂອງສັງຄົມທີ່ເປັນຢູ່ໃນເວລານັ້ນ. ເປໂຕຖືກຂົ່ມເຫັງໂດຍອົງປະກອບທາງສາສະໜາຂອງສັງຄົມໃນເວລານັ້ນ. ທຸກຢ່າງນີ້ໝາຍຄວາມວ່າ ທຸກໆສອງປີ ລາວຕ້ອງເຄື່ອນຍ້າຍຈາກບ່ອນໜຶ່ງໄປອີກບ່ອນໜຶ່ງ ແລະ ດຳລົງຊີວິດທີ່ໂດດດ່ຽວ. ໃນເວລາສອງປີທີ່ມີປະສົບການທີ່ພິເສດເຫຼົ່ານີ້, ລາວໄດ້ຮັບຄວາມເຂົ້າໃຈ ແລະ ຮຽນຮູ້ຫຼາຍຢ່າງກ່ຽວກັບສິ່ງທີ່ລາວບໍ່ມີຄວາມຮູ້ມາກ່ອນ ຈົນລາວແຕກຕ່າງຈາກຕົວລາວເອງເມື່ອອາຍຸ 14 ປີ, ເຊິ່ງຄືກັບວ່າບໍ່ມີແມ່ນຫຍັງຄືກັນເລີຍໃນຕອນນີ້. ຕະຫຼອດເວລາສອງປີເຫຼົ່ານີ້ທີ່ລາວໄດ້ປະສົບກັບຄົນທຸກປະເພດ ແລະ ໄດ້ເຫັນຄວາມຈິງທຸກປະເພດກ່ຽວກັບສັງຄົມ, ຜົນຕາມມາກໍ່ຄື ລາວເລີ່ມປະຖິ້ມພິທີກຳທຸກຮູບແບບຈາກໂລກແຫ່ງສາສະໜາອອກຈາກຕົນເອງ. ລາວຍັງໄດ້ຮັບຜົນກະທົບຢ່າງເລິກເຊິ່ງຈາກການພັດທະນາໃນພາລະກິດຂອງພຣະວິນຍານບໍລິສຸດໃນເວລານັ້ນ; ໃນຕອນນີ້, ພຣະເຢຊູເຈົ້າກຳລັງເຮັດພາລະກິດເປັນເວລາຫຼາຍປີ, ສະນັ້ນພາລະກິດຂອງເປໂຕຈຶ່ງໄດ້ຮັບອິດທິພົນຈາກພາລະກິດຂອງພຣະວິນຍານບໍລິສຸດໃນເວລານັ້ນອີກດ້ວຍເຖິງແມ່ນວ່າລາວຍັງບໍ່ໄດ້ພົບກັບພຣະເຢຊູເທື່ອ. ດ້ວຍເຫດຜົນນີ້, ເມື່ອເປໂຕກຳລັງເທດສະໜາ ລາວຈຶ່ງໄດ້ຮັບຫຼາຍສິ່ງທີ່ໄພ່ພົນຮຸ່ນກ່ອນບໍ່ເຄີຍໄດ້ຮັບຈັກເທື່ອ. ແນ່ນອນ ໃນເວລານັ້ນ ລາວຮູ້ຈັກພຣະເຢຊູແຕ່ໜ້ອຍດຽວ, ແຕ່ລາວບໍ່ເຄີຍມີໂອກາດໄດ້ພົບກັບພຣະອົງຢູ່ຊ່ອງໜ້າ. ລາວພຽງແຕ່ຫວັງ ແລະ ປາຖະໜາທີ່ຈະເຫັນຮູບຮ່າງຈາກສະຫວັນທີ່ເກີດມາຈາກພຣະວິນຍານບໍລິສຸດ.

ໃນຕອນຄໍ່າຂອງແລງມື້ໜຶ່ງ, ເປໂຕກຳລັງຫາປາຈາກເຮືອຂອງລາວ (ໃກ້ກັບຝັ່ງຂອງບ່ອນທີ່ເອີ້ນໃນຕອນນີ້ວ່າ ທະເລກາລີເລ). ລາວຖືກ້ານເບັດໃນມືຂອງລາວ, ແຕ່ມີສິ່ງອື່ນທີ່ຢູ່ໃນຄວາມຄິດຂອງລາວ. ຕາເວັນທີ່ກຳລັງຕົກດິນໄດ້ເປັ່ງປະກາຍເທິງພື້ນນໍ້າຄືກັບມະຫາສະໝຸດເລືອດທີ່ກວ້າງໃຫຍ່. ແສງສະຫວ່າງໄດ້ສະທ້ອນໃຫ້ເຫັນເຖິງໃບໜ້າທີ່ໜຸ່ມນ້ອຍ ແຕ່ສະຫງົບງຽບ ແລະ ໜັກແໜ້ນຂອງເປໂຕ; ລາວເບິ່ງຄືກັບວ່າກຳລັງຄຸ່ນຄິດຢ່າງເລິກເຊິ່ງ. ໃນຊ່ວງເວລານັ້ນ, ລົມອ່ອນໄດ້ພັດມາ ແລະ ລາວຮູ້ສຶກໃນທັນທີເຖິງຄວາມໂດດດ່ຽວໃນຊີວິດຂອງລາວ ເຊິ່ງເຮັດໃຫ້ລາວມີຄວາມຮູ້ສຶກໜາວເຢັນຢ່າງກະທັນຫັນ. ເມື່ອຄື້ນມະຫາສະໝຸດເປັ່ງປະກາຍໃນແສງສະຫວ່າງ, ມັນກໍ່ຊັດເຈນວ່າລາວບໍ່ມີ

ອາລົມທີ່ຈະຫາປາ. ເມື່ອລາວກຳລັງສັບສົນໃນຄວາມຄິດ, ໃນທັນໃດນັ້ນ ລາວກໍ່ໄດ້ຍິນຄົນໜຶ່ງທີ່ຢູ່ຫຼັງຂອງລາວເວົ້າຂຶ້ນວ່າ "ຊີໂມນບາໂຈນາ ຄົນຢິວເອີຍ, ມື້ແຫ່ງຊີວິດຂອງເຈົ້າໂດດດ່ຽວ. ເຈົ້າຈະຕິດຕາມເຮົາບໍ?" ດ້ວຍຄວາມມືນງົງ, ເປໂຕປະກ້ານເບັດທີ່ລາວກຳລັງຖືໃນທັນທີ ເຊິ່ງຈົມລົງສູ່ກົ້ນທະເລຢ່າງກະທັນຫັນ. ເປໂຕຟ້າວຫັນມາເພື່ອເບິ່ງຜູ້ຊາຍທີ່ຢືນຢູ່ໃນເຮືອຂອງລາວ. ລາວຫຼຽວເບິ່ງພຣະອົງຂຶ້ນໆລົງໆ: ຜົມຂອງມະນຸດທີ່ຫ້ອຍລົງຈົນຮອດບ່າໄຫຼ່ຂອງພຣະອົງແມ່ນມີສີເຫຼືອງທອງອ່ອນໆເມື່ອຢູ່ໃນແສງຕາເວັນ, ພຣະອົງສວມໃສ່ເສື້ອຜ້າທີ່ເທົາ, ມີລວງສູງປານກາງ ແລະ ມີລັກສະນະເປັນຜູ້ຊາຍຄົນຢິວຕັ້ງແຕ່ຫົວຮອດນິ້ວຕີນ. ໃນແສງສະຫວ່າງທີ່ກຳລັງຫາຍໄປ, ເສື້ອຜ້າສີເທົາຂອງຜູ້ຊາຍຄົນນັ້ນເບິ່ງຄືເປັນສີດຳໜ້ອຍໜຶ່ງ ແລະ ໃບໜ້າຂອງພຣະອົງກໍ່ເບິ່ງຄືເປັ່ງປະກາຍເລັກນ້ອຍ. ຫຼາຍຄັ້ງ ເປໂຕສະແຫວງຫາເພື່ອພົບກັບພຣະເຢຊູ, ແຕ່ບໍ່ເຄີຍສຳເລັດ. ໃນຊ່ວງເວລານັ້ນ ເລິກໆພາຍໃນຈິດວິນຍານຂອງລາວ, ເປໂຕເຊື່ອວ່າຜູ້ຊາຍຄົນນີ້ຕ້ອງເປັນຄົນທີ່ບໍລິສຸດໃນຫົວໃຈຂອງລາວ ແລະ ດ້ວຍເຫດນັ້ນລາວຈຶ່ງກົ້ມລົງໃນເຮືອຫາປາ ແລະ ເວົ້າວ່າ "ເປັນໄປໄດ້ບໍວ່າພຣະອົງເປັນພຣະຜູ້ເປັນເຈົ້າທີ່ມາດເພື່ອເທດສະໜາກ່ຽວກັບຂ່າວປະເສີດແຫ່ງອານາຈັກສະຫວັນ? ຂ້ານ້ອຍໄດ້ຍິນປະສົບການຂອງພຣະອົງ, ແຕ່ຂ້ານ້ອຍບໍ່ເຄີຍເຫັນພຣະອົງ. ຂ້ານ້ອຍຕ້ອງການຕິດຕາມພຣະອົງ, ແຕ່ຂ້ານ້ອຍບໍ່ສາມາດຄົ້ນຫາພຣະອົງ". ໃນຕອນນັ້ນເອງ, ພຣະເຢຊູເຈົ້າໄດ້ຍັບໄປຫ້ອງໃນເຮືອ ເຊິ່ງເປັນບ່ອນທີ່ພຣະອົງນັ່ງລົງຢ່າງໃຈເຢັນ. "ລຸກຂຶ້ນ ແລະ ມານັ່ງໃກ້ເຮົາ!" ພຣະອົງເວົ້າຂຶ້ນ. "ເຮົາມາທີ່ນີ້ເພື່ອຊອກຫາຄົນທີ່ຮັກເຮົາຢ່າງແທ້ຈິງ. ເຮົາໄດ້ມາເພື່ອເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນເປັນພິເສດ ແລະ ເຮົາຈະເດີນທາງທົ່ວດິນແດນເພື່ອຊອກຫາຄົນທີ່ມີຄວາມຄິດດຽວກັນກັບເຮົາ. ເຈົ້າເຕັມໃຈບໍ?" ເປໂຕຕອບກັບວ່າ: "ຂ້ານ້ອຍຕ້ອງຕິດຕາມຜູ້ທີ່ຖືກສົ່ງມາໂດຍພຣະບິດາທີ່ຢູ່ໃນສະຫວັນ. ຂ້ານ້ອຍຕ້ອງຮັບຮູ້ຜູ້ທີ່ຖືກເລືອກໂດຍພຣະວິນຍານບໍລິສຸດ. ຍ້ອນຂ້ານ້ອຍຮັກພຣະບິດາທີ່ຢູ່ໃນສະຫວັນ, ຂ້ານ້ອຍຈະບໍ່ເຕັມທີ່ຈະຕິດຕາມພຣະອົງໄດ້ແນວໃດ?" ເຖິງແມ່ນຄຳເວົ້າຂອງເປໂຕເຕັມໄປດ້ວຍແນວຄິດສາສະໜາ, ພຣະເຢຊູກໍ່ຍິ້ມ ແລະ ງຶກຫົວຂອງພຣະອົງດ້ວຍຄວາມພໍໃຈ. ໃນຊ່ວງເວລານັ້ນ, ຄວາມຮູ້ສຶກເຖິງຄວາມຮັກໃນລັກສະນະພໍ່ສຳລັບເປໂຕກໍ່ໃຫຍ່ຂຶ້ນພາຍໃນພຣະອົງ.

ເປໂຕຕິດຕາມພຣະເຢຊູເປັນເວລາຫຼາຍປີ ແລະ ໄດ້ເຫັນຫຼາຍຢ່າງໃນພຣະອົງທີ່ບໍ່ໄດ້ຢູ່ໃນຄົນອື່ນ. ຫຼັງຈາກທີ່ຕິດຕາມພຣະອົງເປັນເວລາໜຶ່ງປີ, ເປໂຕກໍ່ຖືກເລືອກໂດຍພຣະເຢຊູໃຫ້ຢູ່ໃນບັນດາສາວົກສິບສອງຄົນ. (ແນ່ນອນ, ພຣະເຢຊູບໍ່ໄດ້ກ່າວສິ່ງນີ້ອອກດັງ ແລະ ຄົນອື່ນກໍ່ບໍ່ຮູ້ກ່ຽວກັບມັນເລີຍ.) ໃນຊີວິດ, ເປໂຕວັດແທກຕົນເອງໃສ່ທຸກສິ່ງທີ່ພຣະເຢຊູເຮັດ. ສິ່ງທີ່ໂດດເດັ່ນທີ່ສຸດກໍ່ຄື ຂໍ້ຄວາມທີ່ພຣະເຢຊູເທດສະໜາໄດ້ແກະສະຫຼັກໃສ່ຫົວໃຈຂອງລາວ. ລາວອຸທິດຕົນ ແລະ ຈົງຮັກພັກດີຕໍ່ພຣະເຢຊູຢ່າງສິ້ນເຊີງ ແລະ ລາວບໍ່ເຄີຍກ່າວຄຳຮ້ອງທຸກໃດໆຕໍ່ພຣະອົງ. ຜົນຕາມມາກໍ່ຄື ລາວໄດ້ກາຍມາເປັນມິດສະຫາຍທີ່ຈິງໃຈຂອງພຣະເຢຊູໃນທຸກບ່ອນທີ່ພຣະອົງໄປ. ເປໂຕສັງເກດຄຳສັ່ງສອນຂອງພຣະເຢຊູ, ຄຳເວົ້າທີ່ອ່ອນໂຍນຂອງພຣະອົງ, ສິ່ງທີ່ພຣະອົງກິນເພື່ອເປັນອາຫານຂອງພຣະອົງ, ເສື້ອຜ້າຂອງພຣະອົງ, ທີ່ພັກພິງຂອງພຣະອົງ ແລະ ລັກສະນະທີ່ພຣະອົງເດີນທາງ. ລາວຮຽນແບບພຣະເຢຊູໃນທຸກດ້ານ.

ລາວບໍ່ເຄີຍຖືວ່າຕົນເອງຊອບທຳ, ແຕ່ປະຖິ້ມທຸກສິ່ງທີ່ຫຼ້າສະໄໝ, ຕິດຕາມຕົວຢ່າງຂອງພຣະເຢຊູທັງໃນຄຳເວົ້າ ແລະ ການກະທຳ. ມັນເປັນເວລານັ້ນເອງທີ່ເປໂຕຮູ້ສຶກວ່າ ສະຫວັນ ແລະ ແຜ່ນດິນໂລກ ແລະ ສິ່ງທັງປວງຢູ່ໃນມືຂອງອົງຊົງລິດທານຸພາບສູງສຸດ ແລະ ດ້ວຍເຫດຜົນນີ້ ລາວຈຶ່ງບໍ່ມີທາງເລືອກຂອງຕົນເອງ. ເປໂຕຍັງໄດ້ຊຶມຊັບທຸກສິ່ງທີ່ພຣະເຢຊູເປັນ ແລະ ໃຊ້ມັນໃຫ້ເປັນຕົວຢ່າງ. ຊີວິດຂອງພຣະເຢຊູໄດ້ສະແດງໃຫ້ເຫັນວ່າພຣະອົງບໍ່ຖືວ່າຕົນເອງຊອບທຳໃນສິ່ງທີ່ພຣະອົງເຮັດ; ແທນທີ່ຈະໂອ້ອວດກ່ຽວກັບຕົນເອງ, ພຣະອົງດົນບັນດານຜູ້ຄົນດ້ວຍຄວາມຮັກ. ສິ່ງຕ່າງໆໄດ້ສະແດງໃຫ້ເຫັນເຖິງສິ່ງທີ່ພຣະເຢຊູເປັນ ແລະ ດ້ວຍເຫດຜົນນີ້ ເປໂຕຈຶ່ງຮຽນແບບທຸກສິ່ງທີ່ກ່ຽວກັບພຣະອົງ. ປະສົບການຂອງເປໂຕເຮັດໃຫ້ລາວມີຄວາມຮູ້ຫຼາຍຂຶ້ນເຖິງຄວາມເປັນຕາຮັກຂອງພຣະເຢຊູ ແລະ ລາວໄດ້ເວົ້າສິ່ງຕ່າງໆ ເຊັ່ນ: "ຂ້ານ້ອຍໄດ້ຄົ້ນຫາອົງຊົງລິດທານຸພາບສູງສຸດທົ່ວຈັກກະວານ ແລະ ຂ້ານ້ອຍໄດ້ເຫັນສິ່ງອັດສະຈັນຈາກສະຫວັນ ແລະ ແຜ່ນດິນໂລກ ແລະ ສິ່ງທັງປວງ ແລະ ດ້ວຍເຫດນັ້ນ ຂ້ານ້ອຍຈຶ່ງໄດ້ຮັບຄວາມຮູ້ສຶກທີ່ເລິກເຊິ່ງກ່ຽວກັບຄວາມເປັນຕາຮັກຂອງອົງຊົງລິດທານຸພາບສູງສຸດ. ເຖິງຢ່າງໃດກໍ່ຕາມ, ຂ້ານ້ອຍບໍ່ເຄີຍມີຄວາມຮັກທີ່ແທ້ຈິງໃນຫົວໃຈຂອງຂ້ານ້ອຍເອງ ແລະ ຂ້ານ້ອຍບໍ່ເຄີຍເຫັນຄວາມເປັນຕາຮັກຂອງອົງຊົງລິດທານຸພາບສູງສຸດດ້ວຍຕາຂອງຂ້ານ້ອຍເອງ. ມື້ນີ້ ໃນສາຍຕາຂອງອົງຊົງລິດທານຸພາບສູງສຸດ, ພຣະອົງໄດ້ຫຼຽວເບິ່ງຂ້ານ້ອຍດ້ວຍຄວາມໂປດປານ ແລະ ຂ້ານ້ອຍຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະເຈົ້າໃນທີ່ສຸດ. ຂ້ານ້ອຍໄດ້ຄົ້ນພົບໃນທີ່ສຸດວ່າ ມັນບໍ່ແມ່ນພຽງແຕ່ຍ້ອນພຣະເຈົ້າໄດ້ສ້າງສິ່ງທັງປວງເທົ່ານັ້ນທີ່ເຮັດໃຫ້ມະນຸດຊາດເຮັດພຣະອົງ; ໃນຊີວິດປະຈຳວັນຂອງຂ້ານ້ອຍ, ຂ້ານ້ອຍໄດ້ຄົ້ນພົບຄວາມເປັນຕາຮັກທີ່ໄຮ້ຂອບເຂດຂອງພຣະອົງ. ມັນຈະສາມາດຖືກຈຳກັດໃຫ້ຢູ່ໃນສິ່ງທີ່ສາມາດເບິ່ງເຫັນໃນຕອນນີ້ໄດ້ແນວໃດ?" ເມື່ອເວລາຜ່ານໄປ, ຫຼາຍສິ່ງທີ່ເປັນຕາຮັກກໍ່ຍັງປາກົດໃນເປໂຕເຊັ່ນກັນ. ລາວເລີ່ມເຊື່ອຟັງພຣະເຢຊູຫຼາຍ ແລະ ແນ່ນອນ ລາວຍັງທົນທຸກກັບຄວາມລົ້ມເຫຼວສອງສາມຢ່າງ. ເມື່ອພຣະເຢຊູພາລາວໄປເທດສະໜາໃນສະຖານທີ່ຫຼາຍແຫ່ງ, ເປໂຕກໍ່ຖ່ອມຕົວລົງ ແລະ ຮັບຟັງຄຳເທດສະໜາຂອງພຣະເຢຊູຢູ່ສະເໝີ. ລາວບໍ່ເຄີຍອວດດີຍ້ອນລາວໄດ້ຕິດຕາມພຣະເຢຊູເປັນເວລາຫຼາຍປີ. ຫຼັງຈາກທີ່ພຣະເຢຊູໄດ້ບອກວ່າເຫດຜົນທີ່ພຣະອົງມາແມ່ນເພື່ອຖືກເທິງໄມ້ກາງແຂນເພື່ອວ່າພຣະອົງຈະສາມາດສຳເລັດພາລະກິດຂອງພຣະອົງ, ເປໂຕກໍ່ມັກຮູ້ສຶກເປັນທຸກໃນຫົວໃຈຂອງລາວ ແລະ ຈະຮ້ອງໄຫ້ຄົນດຽວຢ່າງລັບໆ. ເຖິງຢ່າງໃດກໍ່ຕາມ, ມື້ "ທີ່ໂຊກຮ້າຍ" ກໍ່ມາເຖິງໃນທີ່ສຸດ. ຫຼັງຈາກທີ່ພຣະເຢຊູຖືກຈັບກຸມ, ເປໂຕກໍ່ຮ້ອງໄຫ້ຄົນດຽວໃນເຮືອຫາປາຂອງລາວ ແລະ ກ່າວຄຳອະທິຖານຫຼາຍຢ່າງຍ້ອນສິ່ງນີ້. ແຕ່ໃນຫົວໃຈຂອງລາວ, ລາວຮູ້ວ່ານີ້ແມ່ນຄວາມປະສົງຂອງພຣະເຈົ້າພຣະບິດາ ແລະ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ລາວຍັງເປັນທຸກໃຈ ແລະ ເຕັມໄປດ້ວຍນ້ຳຕາພຽງແຕ່ເພາະຄວາມຮັກຂອງລາວ. ແນ່ນອນ ນີ້ຄືຄວາມອ່ອນແອຂອງມະນຸດ. ສະນັ້ນ ເມື່ອລາວໄດ້ຮຽນຮູ້ວ່າພຣະເຢຊູຈະຖືກຄຶງເທິງໄມ້ກາງແຂນ, ລາວກໍ່ຖາມພຣະເຢຊູວ່າ "ຫຼັງຈາກທີ່ພຣະອົງຈາກໄປ, ພຣະອົງຈະກັບຄືນມາຢູ່ທ່າມກາງພວກເຮົາ ແລະ ເຝົ້າເບິ່ງພວກເຮົາບໍ? ພວກເຮົາຍັງຈະສາມາດເຫັນພຣະອົງບໍ?" ເຖິງແມ່ນຄຳເວົ້າເຫຼົ່ານີ້ໄຮ້ດຽງສາຫຼາຍ ແລະ ເຕັມໄປດ້ວຍແນວຄິດຂອງມະນຸດ, ພຣະເຢຊູ

ກໍ່ຮູ້ເຖິງຄວາມຂົມຂື່ນໃນການທົນທຸກຂອງເປໂຕ, ສະນັ້ນ ຜ່ານຄວາມຮັກຂອງພຣະອົງ ພຣະອົງຈຶ່ງຄຳນຶງເຖິງຄວາມອ່ອນແອຂອງເປໂຕ: "ເປໂຕ, ເຮົາຮັກເຈົ້າ. ເຈົ້າຮູ້ບໍ? ເຖິງແມ່ນວ່າບໍ່ມີເຫດຜົນເບື້ອງຫຼັງສິ່ງທີ່ເຈົ້າເວົ້າ, ພຣະບິດາໄດ້ສັນຍາວ່າຫຼັງຈາກທີ່ເຮົາຟື້ນຄືນຊີບ ເຮົາຈະປາກົດຕໍ່ຜູ້ຄົນເປັນເວລາ 40 ມື້. ເຈົ້າບໍ່ເຊື່ອບໍວ່າພຣະວິນຍານຂອງເຮົາຈະປະທານຄວາມກະລຸນາມາໃຫ້ພວກເຈົ້າທຸກຄົນຢູ່ເລື້ອຍໆ?" ເຖິງແມ່ນເປໂຕຮູ້ສຶກວ່າຂ້ອນຂ້າງໄດ້ຮັບກຳລັງໃຈຈາກສິ່ງນີ້, ລາວກໍ່ຍັງຮູ້ສຶກວ່າມີສິ່ງທີ່ຂາດຫາຍໄປ ແລະ ດ້ວຍເຫດນັ້ນ ຫຼັງຈາກທີ່ຟື້ນຄືນຊີບ ພຣະເຢຊູຈຶ່ງປາກົດຕໍ່ລາວຢ່າງເປີດເຜີຍເປັນຄັ້ງທຳອິດ. ເຖິງຢ່າງໃດກໍ່ຕາມ ເພື່ອທີ່ຈະຫ້າມບໍ່ໃຫ້ເປໂຕສືບຕໍ່ຍຶດຕິດກັບແນວຄິດຂອງລາວ, ພຣະເຢຊູປະຕິເສດອາຫານຫຼູຫຼາທີ່ເປໂຕໄດ້ກະກຽມໃຫ້ພຣະອົງ ແລະ ຫາຍຈາກໄປໃນພິບຕາດຽວ. ຈາກຊ່ວງເວລານັ້ນເປັນຕົ້ນມາ, ໃນທີ່ສຸດ ເປໂຕກໍ່ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບພຣະເຢຊູເຈົ້າ ແລະ ຍິ່ງຮັກພຣະອົງຫຼາຍຂຶ້ນ. ຫຼັງຈາກການຟື້ນຄືນຊີບຂອງພຣະອົງ, ພຣະເຢຊູກໍ່ປາກົດຕົວຕໍ່ເປໂຕຢູ່ເລື້ອຍໆ. ພຣະອົງປາກົດຕົວຕໍ່ເປໂຕອີກສາມຄັ້ງຫຼັງຈາກກາຍສີ່ສິບມື້ ແລະ ພຣະອົງໄດ້ຂຶ້ນສູ່ສະຫວັນ. ການປາກົດຕົວແຕ່ລະຄັ້ງຖືກແມ່ນຕອນທີ່ພາລະກິດຂອງພຣະວິນຍານບໍລິສຸດກຳລັງຈະສຳເລັດລົງ ແລະ ພາລະກິດໃໝ່ກຳລັງຈະເລີ່ມຕົ້ນຂຶ້ນ.

ຕະຫຼອດຊີວິດຂອງລາວ, ເປໂຕໄດ້ຫາປາເພື່ອລ້ຽງຊີບ ແຕ່ຍິ່ງໄປກວ່ານັ້ນ ລາວໄດ້ດຳລົງຊີວິດເພື່ອເທດສະໜາ. ໃນປີຕໍ່ມາຂອງລາວ, ລາວໄດ້ຂຽນຈົດໝາຍຄັ້ງທີໜຶ່ງ ແລະ ສອງໃນພຣະທຳເປໂຕພ້ອມທັງຈົດໝາຍອີກຫຼາຍສະບັບໃຫ້ແກ່ຄຣິດຕະຈັກແຫ່ງເມືອງຟີລາເດວເຟຍໃນເວລານັ້ນ. ຜູ້ຄົນທີ່ຢູ່ໃນຊ່ວງເວລານີ້ກໍ່ຖືກສຳຜັດໂດຍລາວຢ່າງເລິກເຊິ່ງ. ແທນທີ່ຈະສັ່ງສອນຜູ້ຄົນໂດຍໃຊ້ຫຼັກຖານອ້າງອີງຂອງລາວເອງ, ລາວໄດ້ໃຫ້ການບຳລຸງລ້ຽງຊີວິດທີ່ເໝາະສົມແກ່ພວກເຂົາ. ລາວບໍ່ເຄີຍລືມຄຳສັ່ງສອນຂອງພຣະເຢຊູກ່ອນທີ່ພຣະອົງຈະຈາກໄປ ແລະ ຖືກກະຕຸ້ນໂດຍຄຳສັ່ງສອນເຫຼົ່ານັ້ນຕະຫຼອດຊີວິດຂອງລາວ. ໃນຂະນະທີ່ກຳລັງຕິດຕາມພຣະເຢຊູ, ລາວຕັ້ງໃຈທີ່ຈະຕອບແທນຄວາມຮັກຂອງພຣະຜູ້ເປັນເຈົ້າດ້ວຍຄວາມຕາຍຂອງລາວ ແລະ ຕິດຕາມຕົວຢ່າງຂອງພຣະອົງໃນທຸກສິ່ງ. ພຣະເຢຊູເຫັນດີກັບສິ່ງນີ້, ສະນັ້ນ ເມື່ອເປໂຕອາຍຸ 53 ປີ (ເປັນເວລາອີກ 20 ປີ ນັບຕັ້ງແຕ່ທີ່ພຣະເຢຊູຈາກໄປ), ພຣະເຢຊູກໍ່ປາກົດຕົວຕໍ່ລາວເພື່ອຊ່ວຍບັນລຸຄວາມປາຖະໜາຂອງລາວ. ໃນເຈັດປີຫຼັງຈາກນັ້ນ, ເປໂຕກໍ່ໃຊ້ຊີວິດຂອງລາວເພື່ອຮູ້ຈັກຕົນເອງ. ມື້ໜຶ່ງ, ໃນຕອນສຸດທ້າຍຂອງເຈັດປີເຫຼົ່ານີ້, ລາວກໍ່ຖືກຄຶງເທິງໄມ້ກາງແຂນກັບຫົວ ແລ້ວນຳຊີວິດທີ່ບໍ່ທຳມະດາຂອງລາວໄປສູ່ຈຸດຈົບ.

# ບົດທີ 8

ເມື່ອພຣະເຈົ້າເວົ້າຈາກທັດສະນະຂອງພຣະວິນຍານ, ນໍ້າສຽງຂອງພຣະອົງແມ່ນແນໃສ່ມະນຸດທຸກຄົນ. ເມື່ອພຣະເຈົ້າເວົ້າຈາກທັດສະນະຂອງມະນຸດ, ນໍ້າສຽງຂອງພຣະອົງແມ່ນແນໃສ່ທຸກຄົນທີ່ປະຕິບັດຕາມການຊີ້ນໍາຂອງພຣະວິນຍານຂອງພຣະອົງ. ເມື່ອພຣະເຈົ້າເວົ້າເປັນບຸກຄົນທີສາມ (ຈາກສິ່ງທີ່ຜູ້ຄົນເອີ້ນວ່າ ທັດສະນະຂອງຜູ້ສັງເກດການ), ພຣະອົງແມ່ນສະແດງພຣະທໍາຂອງພຣະອົງຕໍ່ຜູ້ຄົນໂດຍກົງ ເພື່ອວ່າພວກເຂົາຈະເຫັນພຣະອົງເປັນຜູ້ບັນຍາຍ ແລະ ເບິ່ງຄືກັບວ່າ ສໍາລັບພວກເຂົາແລ້ວ ສິ່ງທີ່ອອກມາຈາກປາກຂອງພຣະອົງ ແມ່ນສິ່ງທີ່ບໍ່ມີຈໍາກັດ ທີ່ມະນຸດບໍ່ມີຄວາມຮູ້ ແລະ ເປັນສິ່ງທີ່ມະນຸດບໍ່ສາມາດຢັ່ງເຖິງໄດ້. ບໍ່ແມ່ນແນວນັ້ນບໍ? ເມື່ອພຣະເຈົ້າເວົ້າຈາກທັດສະນະຂອງພຣະວິນຍານ, ມະນຸດທຸກຄົນກໍຕົກຕະລຶງ. "ຄວາມຮັກຂອງມະນຸດທີ່ມີຕໍ່ເຮົາແມ່ນໜ້ອຍຫຼາຍ ແລະ ສັດທາຂອງພວກເຂົາທີ່ມີໃນຕົວເຮົາກໍໜ້ອຍຢ່າງເປັນຕາສົມເພດເຊັ່ນກັນ. ຖ້າເຮົາບໍ່ໄດ້ແນການໂຈມຕີດ້ວຍພຣະທໍາຂອງເຮົາໃສ່ຈຸດອ່ອນຂອງມະນຸດ ພວກເຂົາກໍຈະໂອ້ອວດ ແລະ ເວົ້າເກີນຄວາມຈິງ, ເວົ້າຂີ້ຄຸຍ ແລະ ມີທິດສະດີທີ່ໂອ້ອວດ ຄືກັບວ່າ ພວກເຂົາຮອບຮູ້ ແລະ ຮູ້ໝົດທຸກຢ່າງ ກ່ຽວກັບບັນຫາທາງແຜ່ນດິນໂລກ". ພຣະທໍາເຫຼົ່ານີ້ບໍ່ພຽງແຕ່ເປີດເຜີຍມະນຸດຕາມທີ່ພວກເຂົາເປັນຢ່າງແທ້ຈິງ ແລະ ຕໍາແໜ່ງທີ່ພຣະເຈົ້າມີໃນຫົວໃຈຂອງມະນຸດເທົ່ານັ້ນ, ແຕ່ຍັງເປີດເຜີຍຊີວິດທັງໝົດຂອງມະນຸດອີກດ້ວຍ. ແຕ່ລະຄົນເຊື່ອວ່າພວກເຂົາພິເສດ ແຕ່ບໍ່ຮູ້ແມ່ນແຕ່ວ່າ ມີຄໍາທີ່ຮຽກວ່າ "ພຣະເຈົ້າ". ດັ່ງນັ້ນ, ພວກເຂົາກ້າມີທິດສະດີທີ່ໂອ້ອວດ. ຢ່າງໃດກໍຕາມ, ການ "ມີທິດສະດີທີ່ໂອ້ອວດ" ບໍ່ແມ່ນ "ການເວົ້າ" ໃນລັກສະນະທີ່ວ່າ ຜູ້ຄົນເຂົ້າໃຈມັນ. ກົງກັນຂ້າມ, ມັນໝາຍຄວາມວ່າ ມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ. ທຸກສິ່ງທີ່ພວກເຂົາເຮັດ, ທຸກການກະທໍາທີ່ພວກເຂົາກະທໍາແມ່ນກົງກັນຂ້າມກັບພຣະເຈົ້າ ແລະ ຕໍ່ຕ້ານພຣະອົງໂດຍກົງ ແລະ ທາດແທ້ຂອງການກະທໍາຂອງພວກເຂົາກໍມາຈາກຊາຕານ ແລະ ຕໍ່ຕ້ານກັບພຣະເຈົ້າ ແລະ ມີເຈດຕະນາທີ່ຈະເປັນອິດສະຫຼະ ເຊິ່ງຂັດກັບຄວາມປະສົງຂອງພຣະເຈົ້າ. ນີ້ແມ່ນເຫດຜົນທີ່ພຣະເຈົ້າໄດ້ເວົ້າວ່າ ມະນຸດແມ່ນລ້ວນແລ້ວແຕ່ມີທິດສະດີທີ່ໂອ້ອວດ. ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າການໂຈມຕີດ້ວຍພຣະທໍາຂອງພຣະອົງແມ່ນແນໃສ່ຈຸດອ່ອນຂອງມະນຸດ? ນັ້ນກໍຍ້ອນວ່າ ຕາມເຈດຕະນາຂອງພຣະເຈົ້າແລ້ວ, ຖ້າພຣະອົງບໍ່ໄດ້ເປີດເຜີຍສິ່ງທີ່ເຊື່ອງຊ້ອນຢູ່ສ່ວນເລິກໃນຫົວໃຈຂອງຜູ້ຄົນ ແລ້ວກໍຈະບໍ່ມີໃຜອ່ອນນ້ອມ; ສະນັ້ນ, ຜູ້ຄົນຈະບໍ່ເຂົ້າໃຈຕົວເອງ ແລະ ພວກເຂົາຈະບໍ່ມີຄວາມເຄົາລົບບູຊາພຣະເຈົ້າ. ເວົ້າອີກຢ່າງໜຶ່ງກໍຄື ຖ້າເຈດຕະນາຂອງຜູ້ຄົນບໍ່ຖືກເປີດເຜີຍ ແລ້ວພວກເຂົາກໍຈະບໍ່ກ້າເຮັດຫຍັງ. ບາງເທື່ອກໍອາດຈະສາບແຊ່ງສະຫວັນ ຫຼື ພຣະເຈົ້າ. ສິ່ງເຫຼົ່ານີ້ແມ່ນຈຸດອ່ອນຂອງມະນຸດ. ດັ່ງນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ: "ເຮົາເດີນທາງໄປທຸກແຈມຸມຂອງໂລກຈັກກະວານໃນການຊອກຫາຢ່າງຕໍ່ເນື່ອງເຖິງຜູ້ທີ່ສອດຄ່ອງກັບຄວາມປະສົງຂອງເຮົາ ແລະ ເໝາະສົມສໍາລັບການໃຊ້ງານຂອງເຮົາ". ຖ້ອຍຄໍານີ້ ພ້ອມກັບສິ່ງທີ່ຖືກກ່າວຕໍ່ມາ ກ່ຽວກັບການຄໍານັບອານາຈັກທີ່ດັ່ງຂຶ້ນຢ່າງເປັນທາງການ ແມ່ນເຮັດໃຫ້ເຫັນຢ່າງຊັດເຈນວ່າ ພຣະວິນຍານຂອງພຣະເຈົ້າໄດ້ປະຕິບັດພາລະກິດໃໝ່ຢູ່

ເທິງແຜ່ນດິນໂລກ; ພຽງແຕ່ວ່າ ມະນຸດບໍ່ສາມາດເຫັນສິ່ງນັ້ນດ້ວຍຕາເປົ່າຂອງພວກເຂົາເອງເທົ່ານັ້ນ. ໃນເມື່ອມີການກ່າວໄວ້ວ່າ ພຣະວິນຍານໄດ້ປະຕິບັດພາລະກິດໃໝ່ຢູ່ເທິງແຜ່ນດິນໂລກ, ໂລກຈັກກະວານທັງໝົດກໍຈະປະສົບກັບການປ່ຽນແປງທີ່ສຳຄັນຫຼາຍຢ່າງ: ບຸດຂອງພຣະເຈົ້າ ແລະ ປະຊາຊົນຂອງພຣະເຈົ້າເລີ່ມຍອມຮັບການເປັນພະຍານຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແຕ່ຍິ່ງໄປກວ່ານັ້ນທຸກສາສະໜາ ແລະ ນິກາຍ, ທຸກຊົນຊັ້ນຂອງສັງຄົມ ແລະ ທຸກສະຖານທີ່ກໍຈະຍອມຮັບສິ່ງນັ້ນໃນລະດັບທີ່ແຕກຕ່າງກັນໄປ. ມັນແມ່ນການເຄື່ອນໄຫວທີ່ຍິ່ງໃຫຍ່ຂອງໂລກຈັກກະວານໃນໂລກແຫ່ງວິນຍານ. ມັນເຮັດໃຫ້ໂລກສາສະໜາທັງໝົດສັ່ນສະເທືອນເຖິງໃຈກາງຂອງມັນ ເຊິ່ງບາງສ່ວນແມ່ນໝາຍເຖິງ "ແຜ່ນດິນໄຫວ" ທີ່ໄດ້ກ່າວໄວ້ກ່ອນໜ້ານັ້ນ. ຕໍ່ໄປ ທາງທູດສະຫວັນຈະເລີ່ມພາລະກິດຂອງພວກເຂົາຢ່າງເປັນທາງການ ແລະ ປະຊາຊົນຂອງອິດສະຣາເອນກໍຈະກັບຄືນສູ່ເຮືອນຂອງພວກເຂົາໂດຍຈະບໍ່ໄດ້ພະເນຈອນອີກຕໍ່ໄປ ແລະ ທຸກຄົນໃນນັ້ນທັງໝົດກໍຈະຍອມຮັບເອົາການລ້ຽງດູ. ກົງກັນຂ້າມ, ຊາວເອຢິບແມ່ນພາກັນເລີ່ມແຍກອອກຈາກຂອບເຂດຂອງຄວາມລອດພົ້ນຂອງເຮົາ; ນັ້ນກໍຄື ພວກເຂົາໄດ້ຮັບການຂ້ຽນຕີຂອງເຮົາ (ແຕ່ນັ້ນຍັງບໍ່ໄດ້ເລີ່ມຕົ້ນຢ່າງເປັນທາງການເທື່ອ). ສະນັ້ນ, ເມື່ອໂລກປະສົບກັບການປ່ຽນແປງທີ່ຍິ່ງໃຫຍ່ເຫຼົ່ານີ້ຢ່າງຕໍ່ເນື່ອງ, ມັນຍັງແມ່ນເວລາທີ່ການຄຳນັບອານາຈັກໄດ້ດັງຂຶ້ນຢ່າງເປັນທາງການ ເຊິ່ງເປັນເວລາທີ່ຜູ້ຄົນໄດ້ເອີ້ນວ່າ "ເວລາທີ່ພຣະວິນຍານທີ່ຮຸນແຮງເຈັດເທົ່າໄດ້ເລີ່ມເຮັດພາລະກິດ". ທຸກຄັ້ງທີ່ພຣະເຈົ້າເຮັດພາລະກິດແຫ່ງການຟື້ນຟູ, ໃນໄລຍະເຫຼົ່ານີ້ (ຫຼື ໃນໄລຍະການປ່ຽນແປງເຫຼົ່ານີ້), ບໍ່ມີໃຜສາມາດຮູ້ສຶກເຖິງພາລະກິດຂອງພຣະວິນຍານບໍລິສຸດ. ດັ່ງນັ້ນ, ພຣະທຳຂອງພຣະເຈົ້າທີ່ວ່າ "ເມື່ອຜູ້ຄົນສູນເສຍຄວາມຫວັງ" ກໍເກີດເປັນຈິງ. ນອກຈາກນັ້ນ, ໃນແຕ່ລະໄລຍະຂອງການປ່ຽນເຫຼົ່ານີ້, ເມື່ອມະນຸດສູນເສຍຄວາມຫວັງ ຫຼື ເມື່ອພວກເຂົາຮູ້ສຶກວ່າ ນີ້ແມ່ນກະແສທີ່ຜິດ, ພຣະເຈົ້າແມ່ນໄດ້ເລີ່ມໃໝ່ ແລະ ດຳເນີນຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງ. ຈາກເວລາແຫ່ງການຊົງສ້າງຈົນຮອດປັດຈຸບັນ, ພຣະເຈົ້າໄດ້ຟື້ນພາລະກິດຂອງພຣະອົງ ແລະ ປ່ຽນວິທີການຂອງພາລະກິດຂອງພຣະອົງດ້ວຍລັກສະນະດັ່ງກ່າວ. ເຖິງແມ່ນວ່າຄົນສ່ວນໃຫຍ່ ໃນລະດັບທີ່ແຕກຕ່າງກັນ ຈະສາມາດເຂົ້າໃຈບາງພາກສ່ວນຂອງພາລະກິດນີ້, ແຕ່ຢ່າງໃດກໍຕາມ ໃນທີ່ສຸດແລ້ວ ພວກເຂົາກໍຖືກໄຫຼພັດໄປໂດຍກະແສນໍ້າທີ່ຮຸນແຮງ ເນື່ອງຈາກພວກເຂົາມີວຸດທິພາວະທີ່ຕໍ່າເກີນໄປ; ພວກເຂົາບໍ່ສາມາດເຂົ້າໃຈຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຖືກກຳຈັດ. ຢ່າງໃດກໍຕາມ, ນີ້ຍັງແມ່ນວິທີທີ່ພຣະເຈົ້າເຮັດໃຫ້ຜູ້ຄົນບໍລິສຸດ ແລະ ນີ້ແມ່ນການພິພາກສາຂອງພຣະເຈົ້າທີ່ມີຕໍ່ຄວາມຄິດທີ່ຫຼ້າສະໄໝຂອງມະນຸດ. ຍິ່ງຜູ້ຄົນມີພື້ນຖານຫຼາຍສໍ່າໃດ ຄວາມຄິດທາງສາສະໜາຂອງພວກເຂົາກ່ຽວກັບພຣະເຈົ້າກໍຍິ່ງຫຼາຍຂຶ້ນສໍ່ານັ້ນ ເຊິ່ງມັນຍາກສຳລັບພວກເຂົາທີ່ຈະປ່ອຍວາງ; ພວກເຂົາຍຶດຕິດກັບສິ່ງເກົ່າສະເໝີ ແລະ ມັນຍາກສຳລັບພວກເຂົາທີ່ຈະຍອມຮັບແສງສະຫວ່າງໃໝ່. ໃນອີກດ້ານໜຶ່ງ, ຖ້າຄົນໃດໜຶ່ງກຳລັງຢືນຢູ່ ຄົນນັ້ນກໍຕ້ອງມີພື້ນຖານບາງຢ່າງເພື່ອຢືນຢູ່ ແຕ່ຄົນສ່ວນໃຫຍ່ຍັງມີຄວາມຫຍຸ້ງຍາກໃນການປ່ອຍວາງຄວາມຄິດຂອງພວກເຂົາ. ນີ້ແມ່ນຄວາມຈິງ ໂດຍສະເພາະຢ່າງຍິ່ງກ່ຽວກັບຄວາມຄິດຂອງພວກເຂົາ ທີ່ມີຕໍ່

ພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນ ເຊິ່ງເປັນປະເດັນທີ່ເຫັນໄດ້ຢ່າງຊັດເຈນ.

ໃນພຣະທຳປັດຈຸບັນ, ພຣະເຈົ້າເວົ້າຫຼາຍຢ່າງກ່ຽວກັບນິມິດ ແລະ ບໍ່ຈຳເປັນຕ້ອງບັນຍາຍຢ່າງລະອຽດ. ຫຼັກໆ ພຣະເຈົ້າແມ່ນເວົ້າເຖິງການສ້າງຄຣິສຕະຈັກ ເຊິ່ງໄດ້ວາງພື້ນຖານສຳລັບການສ້າງອານາຈັກ. ໂດຍສະເພາະແລ້ວ ໃນຂະນະທີ່ຄຣິສຕະຈັກຖືກສ້າງ ເປົ້າໝາຍຫຼັກແມ່ນເພື່ອຊັກຈູງຜູ້ຄົນທັງດ້ານຫົວໃຈ ແລະ ຄຳເວົ້າ ເຖິງວ່າພວກເຂົາບໍ່ຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດດ້ວຍຕາຂອງພວກເຂົາເອງກໍຕາມ. ເຖິງແມ່ນວ່າພວກເຂົາຈະຍຶດຖືຄວາມສັດທາໃນຫົວໃຈຂອງພວກເຂົາ, ພວກເຂົາກໍບໍ່ຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດ ຍ້ອນໃນຂັ້ນຕອນນັ້ນແມ່ນບໍ່ສາມາດຈຳແນກພຣະອົງຈາກຜູ້ຄົນ. ໃນຍຸກແຫ່ງອານາຈັກ, ທຸກຄົນຕ້ອງສະແດງຄວາມເຊື່ອຢ່າງແຮງກ້າໃນໃຈຂອງພວກເຂົາ, ຖ້ອຍຄຳຂອງພວກເຂົາ ແລະ ດວງຕາຂອງພວກເຂົາ. ນີ້ພຽງພໍທີ່ຈະສະແດງໃຫ້ເຫັນວ່າ ເພື່ອທີ່ຈະໃຫ້ທຸກຄົນສະແດງຄວາມເຊື່ອຢ່າງແຮງກ້າໃນໃຈ, ຖ້ອຍຄຳ ແລະ ດວງຕາຂອງພວກເຂົາ, ພວກເຂົາຕ້ອງໄດ້ຮັບອະນຸຍາດໃຫ້ຮູ້ຈັກພຣະເຈົ້າທີ່ດຳລົງຊີວິດໃນເນື້ອໜັງດ້ວຍຕາຂອງພວກເຂົາເອງ ໂດຍທີ່ບໍ່ໄດ້ຖືກບີບບັງຄັບ ຫຼື ພຽງແຕ່ຄວາມເຊື່ອທຳມະດາເທົ່ານັ້ນ, ແຕ່ດ້ວຍຄວາມຮູ້ທີ່ມາຈາກຄວາມເຊື່ອຢ່າງແຮງກ້າໃນໃຈ ແລະ ປາກຂອງພວກເຂົາ. ດັ່ງນັ້ນ, ໃນຂັ້ນຕອນນີ້ຂອງການສ້າງຕັ້ງ ແມ່ນບໍ່ມີການຕໍ່ສູ້ ແລະ ການຂ້າກັນ. ກົງກັນຂ້າມ, ຜູ້ຄົນຈະຖືກນຳພາໄປສູ່ແສງສະຫວ່າງດ້ວຍວິທີທາງແຫ່ງພຣະທຳຂອງພຣະເຈົ້າ ແລະ ຜ່ານສິ່ງນີ້ ພວກເຂົາຈະສາມາດສະແຫວງຫາ ແລະ ຄົ້ນຫາ ເພື່ອວ່າພວກເຂົາຈະສາມາດຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດຢ່າງມີສະຕິ. ດັ່ງນັ້ນ, ສຳລັບພຣະເຈົ້າແລ້ວ ຂັ້ນຕອນນີ້ຂອງພາລະກິດແມ່ນງ່າຍທີ່ສຸດ, ພຣະອົງປ່ອຍໃຫ້ທຳມະຊາດດຳເນີນໄປຕາມແນວທາງຂອງມັນ ແລະ ບໍ່ຕໍ່ຕ້ານກັບມະນຸດຊາດ. ໃນທີ່ສຸດ ມັນກໍຈະນຳພາມະນຸດມາຮູ້ຈັກກ່ຽວກັບພຣະເຈົ້າໂດຍທຳມະຊາດ, ສະນັ້ນ ຈົ່ງຢ່າໄດ້ເປັນຫ່ວງ ຫຼື ກັງວົນໃຈເລີຍ. ເມື່ອພຣະເຈົ້າເວົ້າວ່າ "ສະພາບຂອງການຕໍ່ສູ້ຂອງໂລກແຫ່ງວິນຍານແມ່ນຖືກອະທິບາຍຢ່າງລະອຽດໂດຍກົງໃນທ່າມກາງປະຊາຊົນຂອງເຮົາທຸກຄົນ", ພຣະອົງແມ່ນໝາຍຄວາມວ່າ ເມື່ອຜູ້ຄົນເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ ແລະ ເລີ່ມຮູ້ຈັກພຣະເຈົ້າ, ແຕ່ລະຄົນບໍ່ພຽງແຕ່ຈະຖືກຊາຕານລໍ້ລວງຢູ່ພາຍໃນ ແຕ່ພວກເຂົາອາດຍັງຈະຖືກຊາຕານລໍ້ລວງໃນຄຣິສຕະຈັກອີກດ້ວຍ. ຢ່າງໃດກໍຕາມ, ນີ້ແມ່ນເສັ້ນທາງທີ່ທຸກຄົນຕ້ອງເດີນ, ສະນັ້ນ ທຸກຄົນບໍ່ຕ້ອງຕື່ນຕົກໃຈ. ການລໍ້ລວງຂອງຊາຕານອາດມາໃນຫຼາຍຮູບແບບ. ບາງຄົນອາດປະລະ ຫຼື ປະຖິ້ມສິ່ງທີ່ພຣະເຈົ້າເວົ້າ ແລະ ອາດເວົ້າສິ່ງທີ່ເປັນລົບ ເພື່ອເຮັດໃຫ້ຄວາມເປັນບວກຂອງຜູ້ຄົນຫົດຖອຍລົງ; ຢ່າງໃດກໍຕາມ, ໂດຍທົ່ວໄປແລ້ວ ຄົນດັ່ງກ່າວຈະບໍ່ສາມາດເອົາຊະນະໃຈຜູ້ອື່ນເພື່ອມາຢູ່ຂ້າງພວກເຂົາໄດ້. ສິ່ງນີ້ແມ່ນຍາກທີ່ຈະຢັ່ງເຖິງ. ເຫດຜົນຫຼັກສຳລັບສິ່ງນີ້ຄື: ຄົນດັ່ງກ່າວອາດຍັງຕັ້ງໜ້າໃນການເຂົ້າຮ່ວມປະຊຸມແຕ່ພວກເຂົາກໍຍັງບໍ່ຊັດເຈນກ່ຽວກັບນິມິດ. ຖ້າຄຣິສຕະຈັກບໍ່ປ້ອງກັນຈາກພວກເຂົາ, ຄຣິສຕະຈັກທັງໝົດກໍຈະຖືກຊັກຈູງດ້ວຍຄວາມຄິດລົບຂອງພວກເຂົາ ໃນການຕອບກັບພຣະເຈົ້າຢ່າງບໍ່ເຕັມໃຈ ແລະ ດ້ວຍເຫດນັ້ນ ກໍຈະບໍ່ສົນໃຈກັບພຣະທຳຂອງພຣະເຈົ້າ ແລະ ນີ້ກໍຈະໝາຍຄວາມວ່າ ເປັນການຕົກເຂົ້າສູ່ການລໍ້ລວງຂອງຊາຕານໂດຍກົງ. ຄົນດັ່ງກ່າວອາດບໍ່ກະບົດຕໍ່ພຣະເຈົ້າໂດຍກົງ ແຕ່ຍ້ອນ

ພວກເຂົາບໍ່ສາມາດຢັ່ງເຖິງພຣະທຳຂອງພຣະເຈົ້າ ແລະ ບໍ່ຮູ້ຈັກພຣະເຈົ້າ, ພວກເຂົາອາດເຖິງກັບຈົ່ມວ່າ ຫຼື ມີຫົວໃຈທີ່ເຕັມໄປດ້ວຍຄວາມແຄ້ນ. ພວກເຂົາອາດເວົ້າວ່າ ພຣະເຈົ້າໄດ້ປະຖິ້ມພວກເຂົາ ແລະ ດັ່ງນັ້ນ ພວກເຂົາຈຶ່ງບໍ່ສາມາດໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງ. ພວກເຂົາອາດປາດຖະໜາຢາກໜີໄປ ແຕ່ພວກເຂົາມີຄວາມຢ້ານກົວເລັກນ້ອຍ ແລະ ພວກເຂົາອາດເວົ້າວ່າ ພາລະກິດຂອງພຣະເຈົ້າບໍ່ໄດ້ມາຈາກພຣະເຈົ້າ ແຕ່ກົງກັນຂ້າມແມ່ນພາລະກິດຂອງວິນຍານຊົ່ວຮ້າຍ.

ເປັນຫຍັງພຣະເຈົ້າຈຶ່ງກ່າວເຖິງເປໂຕເປັນປະຈຳ? ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ ແມ່ນແຕ່ໂຢບກໍບໍ່ສາມາດທຽບເທົ່າກັບລາວໄດ້? ການເວົ້າເຊັ່ນນັ້ນບໍ່ພຽງແຕ່ເຮັດໃຫ້ຜູ້ຄົນເອົາໃຈໃສ່ກັບການກະທຳຂອງເປໂຕ ແຕ່ຍັງເຮັດໃຫ້ພວກເຂົາປະຖິ້ມຕົວຢ່າງທັງໝົດທີ່ພວກເຂົາມີໃນໃຈຂອງພວກເຂົາ, ແມ່ນແຕ່ຕົວຢ່າງຂອງໂຢບ ທີ່ມີຄວາມເຊື່ອຫຼາຍທີ່ສຸດ ກໍບໍ່ຖືກລະເວັ້ນ. ດ້ວຍວິທີນີ້ເທົ່ານັ້ນ ຈຶ່ງຈະສາມາດບັນລຸຜົນໄດ້ຫຼາຍຂຶ້ນ ເຊິ່ງຜູ້ຄົນສາມາດປະຖິ້ມທຸກສິ່ງ ໃນການພະຍາຍາມຮຽນແບບເປໂຕ ແລະ ໃນການເຮັດເຊັ່ນນັ້ນ ຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າກໍຈະກ້າວໄປຂ້າງໜ້າ. ພຣະເຈົ້າສະແດງໃຫ້ຜູ້ຄົນເຫັນເສັ້ນທາງແຫ່ງການປະຕິບັດ ທີ່ເປໂຕໄດ້ເດີນເພື່ອການຮູ້ຈັກພຣະເຈົ້າ ແລະ ເປົ້າໝາຍໃນການເຮັດເຊັ່ນນັ້ນແມ່ນເພື່ອມອບຈຸດອ້າງອີງໃຫ້ແກ່ຜູ້ຄົນ. ຫຼັງຈາກນັ້ນ ພຣະເຈົ້າກໍໄດ້ທຳນາຍໜຶ່ງໃນບັນດາຫົນທາງທີ່ຊາຕານຈະໃຊ້ລໍ້ລວງມະນຸດ ເມື່ອພຣະອົງເວົ້າວ່າ “ຢ່າງໃດກໍຕາມ, ຖ້າເຈົ້າເຢັນຊາ ແລະ ບໍ່ໃສ່ໃຈກັບພຣະທຳຂອງເຮົາ ເຈົ້າກໍຈະຕໍ່ຕ້ານເຮົາໂດຍທີ່ບໍ່ຕ້ອງສົງໄສເລີຍ. ນີ້ແມ່ນຄວາມຈິງ”. ໃນພຣະທຳເຫຼົ່ານີ້ ພຣະເຈົ້າທຳນາຍລ່ວງໜ້າເຖິງແຜນການອຸບາຍທີ່ຊາຕານຈະພະຍາຍາມໃຊ້; ສິ່ງເຫຼົ່ານັ້ນແມ່ນເປັນຄຳເຕືອນ. ມັນເປັນໄປບໍ່ໄດ້ ທີ່ທຸກຄົນຈະສາມາດເມີນເສີຍຕໍ່ພຣະທຳຂອງພຣະເຈົ້າ, ແຕ່ເຖິງຢ່າງໃດກໍຕາມ ບາງຄົນກໍຈະເປັນສະເລີຍຂອງການລໍ້ໃຈນີ້. ດັ່ງນັ້ນ, ໃນທີ່ສຸດ ພຣະເຈົ້າຈຶ່ງກ່າວໂດຍເນັ້ນວ່າ “ຖ້າພວກເຈົ້າບໍ່ຮູ້ຈັກພຣະທຳຂອງເຮົາ ແລະ ບໍ່ຍອມຮັບພວກມັນ ແລະ ເອົາພວກມັນມາປະຕິບັດ, ພວກເຈົ້າກໍຈະກາຍເປັນເປົ້າໝາຍແຫ່ງການຂ້ຽນຕີຂອງເຮົາຢ່າງຫຼີກເວັ້ນບໍ່ໄດ້! ພວກເຈົ້າຈະກາຍເປັນເຫຍື່ອຂອງຊາຕານຢ່າງແນ່ນອນ!” ນີ້ແມ່ນຄຳແນະນຳຂອງພຣະເຈົ້າທີ່ມີຕໍ່ມະນຸດ. ແຕ່ໃນທີ່ສຸດແລ້ວ ດັ່ງທີ່ພຣະເຈົ້າໄດ້ທຳນາຍໄວ້ລ່ວງໜ້າ, ຄົນສ່ວນໜຶ່ງຈະຕົກເປັນເຫຍື່ອຂອງຊາຕານຢ່າງຫຼີກເວັ້ນບໍ່ໄດ້.

# ບົດທີ 9

ໃນຈິນຕະນາການຂອງຜູ້ຄົນ, ພຣະເຈົ້າຄືພຣະເຈົ້າ ແລະ ມະນຸດກໍຄືມະນຸດ. ພຣະເຈົ້າບໍ່ເວົ້າພາສາຂອງມະນຸດ ແລະ ມະນຸດກໍບໍ່ສາມາດເວົ້າພາສາຂອງພຣະເຈົ້າໄດ້. ສຳລັບພຣະເຈົ້າແລ້ວ ການຕອບສະໜອງຄວາມຕ້ອງການຂອງມະນຸດຈາກພຣະອົງນັ້ນແມ່ນເປັນເລື່ອງງ່າຍທີ່ສາມາດເຮັດໄດ້ງ່າຍທີ່ສຸດ ໃນຂະນະທີ່ຄວາມຕ້ອງການຂອງພຣະເຈົ້າຈາກມະນຸດແມ່ນບໍ່ສາມາດບັນລຸໄດ້ ແລະ ບໍ່ສາມາດຄິດໄດ້ໂດຍມະນຸດ. ຢ່າງໃດກໍຕາມ, ຄວາມຈິງແລ້ວ ມັນເປັນເລື່ອງກົງກັນຂ້າມ: ພຣະເຈົ້າພຽງແຕ່ຂໍ “0.1 ເປີເຊັນ” ຈາກມະນຸດເທົ່ານັ້ນ. ສິ່ງນີ້ບໍ່ພຽງແຕ່ເປັນເລື່ອງທີ່ເປັນຕາງຶດເທົ່ານັ້ນສຳລັບຜູ້ຄົນ ແຕ່ຍັງເຮັດໃຫ້ພວກເຂົາຮູ້ສຶກງົງ ຄືກັບວ່າ ພວກເຂົາມີຄວາມສັບສົນ. ມັນເປັນຍ້ອນແສງສະຫວ່າງ ແລະ ພຣະຄຸນຂອງພຣະເຈົ້າເທົ່ານັ້ນ ທີ່ຜູ້ຄົນໄດ້ຮັບຄວາມຮູ້ເລັກນ້ອຍກ່ຽວກັບຄວາມປະສົງຂອງພຣະເຈົ້າ. ຢ່າງໃດກໍຕາມ, ໃນວັນທີ 1 ມີນາ ທຸກຄົນແມ່ນຖືກປະໃຫ້ງົງ ແລະ ເກົາຫົວຕົນເອງອີກຄັ້ງ; ພຣະເຈົ້າຂໍໃຫ້ປະຊາຊົນຂອງພຣະອົງເປັນຫິມະທີ່ສະທ້ອນແສງຍິບຍັບ ແລະ ບໍ່ແມ່ນເປັນເມກທີ່ລ່ອງລອຍ. ແລ້ວ “ຫິມະ” ນີ້ແມ່ນໝາຍເຖິງຫຍັງ? ແລະ “ເມກທີ່ລ່ອງລອຍ” ນັ້ນບົ່ງບອກເຖິງຫຍັງ? ໃນຕອນນີ້, ພຣະເຈົ້າແມ່ນຈິງໃຈບໍ່ຍອມເປີດເຜີຍຄວາມໝາຍອັນເລິກເຊິ່ງຂອງພຣະທຳເຫຼົ່ານີ້. ສິ່ງນີ້ເຮັດໃຫ້ຜູ້ຄົນຕົກຢູ່ໃນຄວາມສັບສົນ ແລະ ດ້ວຍເຫດນັ້ນ ພວກເຂົາກໍຈະໄດ້ເພີ່ມຄວາມເຊື່ອຂອງພວກເຂົາ ໃນຂະນະທີ່ພວກເຂົາສະແຫວງຫາຄວາມຮູ້ ເພາະວ່ານີ້ແມ່ນຄວາມຮຽກຮ້ອງຂອງປະຊາຊົນຂອງພຣະເຈົ້າໂດຍສະເພາະ ແລະ ບໍ່ມີສິ່ງອື່ນໃດອີກ; ດັ່ງນັ້ນ ທຸກຄົນຈຶ່ງພົບເຫັນຕົວເອງໃຊ້ເວລາໂດຍບໍ່ຮູ້ຕົວ ໃນການຄຳນຶງເຖິງພຣະທຳທີ່ບໍ່ສາມາດຢັ່ງເຖິງໄດ້ເຫຼົ່ານີ້. ດ້ວຍເຫດນັ້ນ, ແນວຄວາມຄິດຕ່າງໆນາໆຈຶ່ງເກີດຂຶ້ນໃນສະໝອງຂອງພວກເຂົາ, ເກັດຫິມະທີ່ລ່ອງລອຍກໍໄດ້ຜ່ານສາຍຕາຂອງພວກເຂົາໄປຢ່າງໄວ ແລະ ເມກທີ່ລ່ອງລອຍໃນທ້ອງຟ້າກໍປາກົດຂຶ້ນໃນໃຈຂອງພວກເຂົາທັນທີ. ເປັນຫຍັງພຣະເຈົ້າຈຶ່ງຂໍໃຫ້ປະຊາຊົນຂອງພຣະອົງເປັນຫິມະ ແລະ ບໍ່ໃຫ້ເປັນເມກທີ່ລ່ອງລອຍ? ຄວາມໝາຍທີ່ແທ້ຈິງໃນນີ້ແມ່ນຫຍັງ? ໂດຍສະເພາະແລ້ວ ພຣະທຳເຫຼົ່ານີ້ແມ່ນໝາຍເຖິງຫຍັງ? “ຫິມະ” ບໍ່ພຽງແຕ່ເຮັດໃຫ້ທຳມະຊາດສວຍງາມ ແຕ່ຍັງດີສຳລັບດິນປູກຝັງ; ມັນດີສຳລັບການຂ້າເຊື້ອພະຍາດ. ຫຼັງຈາກຫິມະຕົກໜັກ, ເຊື້ອພະຍາດທັງໝົດກໍຖືກຫິມະທີ່ສະທ້ອນແສງຍິບຍັບປົກຄຸມ ແລະ ພື້ນທີ່ທັງໝົດກໍເຕັມໄປດ້ວຍຊີວິດທັນທີ. ໃນທຳນອງດຽວກັນນັ້ນ, ປະຊາຊົນຂອງພຣະເຈົ້າບໍ່ພຽງແຕ່ຕ້ອງຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດ ແຕ່ຍັງຕ້ອງເຮັດໃຫ້ຕົວເອງມີວິໄນບົນຄວາມຈິງ ກ່ຽວກັບການບັງເກີດເປັນມະນຸດຂອງພຣະເຈົ້າ; ໃນການເຮັດເຊັ່ນນັ້ນ ພວກເຂົາຈະໄດ້ດຳລົງຊີວິດໃນຄວາມເປັນມະນຸດແບບປົກກະຕິ. ນີ້ແມ່ນວິທີທີ່ຫິມະເຮັດໃຫ້ທຳມະຊາດເບິ່ງສວຍງາມ; ແລ້ວໃນທີ່ສຸດ, ວຸດທິພາວະຂອງປະຊາຊົນຂອງພຣະເຈົ້າກໍຈະນຳເອົາຈຸດຈົບມາສູ່ມັງກອນແດງທີ່ຍິ່ງໃຫຍ່ ໂດຍສ້າງອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ, ເຜີຍແຜ່ ແລະ ສັນລະເສີນນາມບໍລິສຸດຂອງພຣະເຈົ້າຢ່າງສະຫງ່າລາສີ ເພື່ອວ່າທົ່ວອານາຈັກເທິງແຜ່ນດິນໂລກຈະເຕັມໄປດ້ວຍຄວາມຊອບທຳຂອງພຣະເຈົ້າ, ເປັ່ງປະກາຍໄປດ້ວຍ

ແສງສະຫວ່າງຂອງພຣະອົງ ແລະ ສ່ອງແສງແວວວາວດ້ວຍລັດສະໝີຂອງພຣະອົງ. ທຸກບ່ອນຈະມີພາບແຫ່ງຄວາມສະຫງົບ ແລະ ຄວາມພໍໃຈ, ຄວາມສຸກ, ຄວາມສຳເລັດ ແລະ ຄວາມສວຍງາມທີ່ເກີດຂຶ້ນໃໝ່ຢ່າງຕໍ່ເນື່ອງ. ໂລກລະບາດຕ່າງໆທີ່ມີຢູ່ໃນປັດຈຸບັນ ນັ້ນກໍຄື ອຸປະນິໄສແບບຊາຕານທີ່ເສື່ອມຊາມ ເຊັ່ນ: ຄວາມບໍ່ຊອບທຳ, ຄວາມຄົດລ້ຽວ ແລະ ຄວາມຫຼອກລວງ, ຄວາມປາດຖະໜາທີ່ຊົ່ວຮ້າຍ ແລະ ອື່ນໆ ຈະຖືກກຳຈັດ ແລະ ດ້ວຍເຫດນັ້ນ ສະຫວັນ ແລະ ແຜ່ນດິນໂລກຈຶ່ງຈະຖືກສ້າງຂຶ້ນໃໝ່. ນີ້ແມ່ນຄວາມໝາຍທີ່ແທ້ຈິງກ່ຽວກັບ “ຫຼັງຈາກຫິມະທີ່ຕົກໜັກ”. ຜູ້ທີ່ເປັນເມກທີ່ລ່ອງລອຍແມ່ນເປັນພີ່ນ້ອງຂອງຜູ້ຄົນແບບນັ້ນ ທີ່ຕິດຕາມຝູງສັດທີ່ພຣະເຈົ້າກ່າວເຖິງ; ຖ້າມີການລໍ້ລວງຈາກຊາຕານ ຫຼື ການທົດລອງຈາກພຣະເຈົ້າ, ພວກເຂົາຈະລ່ອງລອຍໄປທັນທີ ໂດຍບໍ່ມີຕົວຕົນຢູ່ອີກຕໍ່ໄປ. ແມ່ນແຕ່ທາດແທ້ໃດໆຂອງພວກເຂົາກໍຈະບໍ່ຢູ່ລອດ ເພາະວ່າ ໄດ້ສູນຫາຍໄປແຕ່ດົນນານແລ້ວ. ຖ້າຜູ້ຄົນເປັນຄືເມກທີ່ລ່ອງລອຍ, ພວກເຂົາບໍ່ພຽງແຕ່ບໍ່ສາມາດດຳລົງຊີວິດຢູ່ໃນພາບລັກຂອງພຣະເຈົ້າໄດ້ເທົ່ານັ້ນ ແຕ່ຍັງນຳເອົາຄວາມອັບອາຍມາສູ່ນາມຂອງພຣະອົງອີກດ້ວຍ, ເນື່ອງຈາກວ່າ ຜູ້ຄົນດັ່ງກ່າວແມ່ນຢູ່ໃນອັນຕະລາຍທີ່ຈະຖືກດຶງໜີໃນເວລາໃດກໍໄດ້ ຫຼື ຢູ່ສະຖານທີ່ໃດກໍໄດ້; ພວກເຂົາແມ່ນອາຫານທີ່ຊາຕານກິນ ແລະ ເມື່ອຊາຕານຈັບຕົວພວກເຂົາໄປ, ພວກເຂົາກໍຈະທໍລະຍົດຕໍ່ພຣະເຈົ້າ ແລະ ຮັບໃຊ້ຊາຕານ. ສິ່ງນີ້ແມ່ນນຳເອົາຄວາມອັບອາຍມາສູ່ນາມຂອງພຣະເຈົ້າຢ່າງແນ່ນອນ ແລະ ແມ່ນສິ່ງທີ່ພຣະເຈົ້າກຽດຊັງທີ່ສຸດ; ຜູ້ຄົນດັ່ງກ່າວແມ່ນສັດຕູຂອງພຣະເຈົ້າ. ສະນັ້ນ, ພວກເຂົາທັງສອງແມ່ນບໍ່ມີແກ່ນແທ້ຂອງຄົນປົກກະຕິ ແລະ ບໍ່ມີຄຸນຄ່າທີ່ແທ້ຈິງ. ຍ້ອນສິ່ງນີ້ ພຣະເຈົ້າຈຶ່ງມີເງື່ອນໄຂດັ່ງກ່າວຕໍ່ປະຊາຊົນຂອງພຣະອົງ. ຢ່າງໃດກໍຕາມ, ຫຼັງຈາກທີ່ເຂົ້າໃຈບາງຢ່າງຈາກພຣະທຳເຫຼົ່ານີ້ແລ້ວ ຜູ້ຄົນຮູ້ສຶກວ່າ ພວກເຂົາເຮັດຫຍັງຕໍ່ໄປບໍ່ຖືກ ຍ້ອນວ່າ ຫົວຂໍ້ຂອງພຣະທຳຂອງພຣະເຈົ້າໄດ້ກາຍເປັນພຣະເຈົ້າເອງ ເຊິ່ງເຮັດໃຫ້ພວກເຂົາຢູ່ໃນຕຳແໜ່ງທີ່ລຳບາກ: “ຍ້ອນເຮົາມາຈາກດິນແດນທີ່ບໍລິສຸດ, ເຮົາຈຶ່ງບໍ່ຄືກັນກັບດອກບົວ ເຊິ່ງມີແຕ່ຊື່ເທົ່ານັ້ນ ແລະ ບໍ່ມີແກ່ນແທ້ ເນື່ອງຈາກມັນມາຈາກບຶງ ແລະ ບໍ່ແມ່ນດິນແດນທີ່ບໍລິສຸດ”. ຫຼັງຈາກກ່າວເຖິງເງື່ອນໄຂຂອງພຣະອົງ ທີ່ມີຕໍ່ປະຊາຊົນຂອງພຣະອົງແລ້ວ ເປັນຫຍັງພຣະເຈົ້າຈຶ່ງອະທິບາຍ ກ່ຽວກັບການກຳເນີດຂອງພຣະອົງເອງ? ເປັນໄປໄດ້ບໍທີ່ມັນມີຄວາມຕິດພັນກັນລະຫວ່າງທັງສອງຢ່າງເຫຼົ່ານັ້ນ? ແນ່ນອນຢູ່ແລ້ວ ມັນມີຄວາມກ່ຽວພັນລະຫວ່າງສິ່ງເຫຼົ່ານັ້ນໃນຕົວຂອງມັນຢູ່ແລ້ວ; ຖ້າບໍ່ມີຄວາມກ່ຽວພັນ, ພຣະເຈົ້າກໍຈະບໍ່ບອກເລື່ອງນັ້ນກັບຜູ້ຄົນ. ໃນທ່າມກາງໃບໄມ້ສີຂຽວ, ດອກບົວຈະໄກວໄປມາໃນສາຍລົມທີ່ພັດເບົາໆ. ມັນສວຍງາມຕໍ່ສາຍຕາ ແລະ ເປັນຕາໜ້າຖະໜຸຖະໜອມຫຼາຍ. ຜູ້ຄົນບໍ່ສາມາດຫ້າມໃຈໄດ້ ແລະ ຢາກລອຍໃນນໍ້າ ເພື່ອເກັບເອົາດອກບົວທີ່ເບັ່ງບານ ແລະ ເຂົ້າແຍງເບິ່ງມັນຢູ່ໃກ້ໆ. ຢ່າງໃດກໍຕາມ, ພຣະເຈົ້າໄດ້ເວົ້າວ່າ ດອກບົວແມ່ນມາຈາກບຶງ ແລະ ມີແຕ່ຊື່ເທົ່ານັ້ນ ໂດຍບໍ່ມີແກ່ນແທ້; ປາກົດວ່າ ພຣະເຈົ້າບໍ່ໄດ້ໃຫ້ຄວາມສຳຄັນກັບດອກບົວ ແລະ ພຣະທຳຂອງພຣະອົງກໍພິສູດໃຫ້ເຫັນວ່າ ພຣະອົງມີຄວາມກຽດຊັງບາງຢ່າງຕໍ່ມັນ. ຕະຫຼອດຍຸກຕ່າງໆ, ຫຼາຍຄົນໄດ້ສັນລະເສີນດອກບົວຫຼາຍ ຍ້ອນວ່າ ມັນເກີດຈາກບ່ອນທີ່ສົກກະປົກ ແຕ່ມັນເອງພັດບໍ່ເປິເປື້ອນ ແລະ ເບິ່ງຄືກັບວ່າ ພວກເຂົາເຖິງກັບພະຍາຍາມຊີ້ບອກວ່າ ດອກບົວນັ້ນ

ແມ່ນບໍ່ມີສິ່ງໃດປຽບທຽບໄດ້ເລີຍ ແລະ ມັນວິເສດຈົນບໍ່ອາດສາມາດພັນລະນາໄດ້. ແຕ່ສຳລັບໃນສາຍຕາຂອງພຣະເຈົ້າແລ້ວ ດອກບົວແມ່ນບໍ່ມີຄຸນຄ່າຫຍັງ, ເຊິ່ງນີ້ຄືຄວາມແຕກຕ່າງລະຫວ່າງພຣະເຈົ້າ ແລະ ມະນຸດຢ່າງແນ່ນອນ. ດັ່ງນັ້ນ ມັນຈຶ່ງສາມາດເຫັນໄດ້ວ່າຄວາມແຕກຕ່າງລະຫວ່າງ ພຣະເຈົ້າ ແລະ ມະນຸດແມ່ນຫ່າງໄກກັນປານເສັ້ນທາງລະຫວ່າງທ້ອງສະຫວັນກັບໃຈກາງຂອງແຜ່ນດິນໂລກ. ຍ້ອນວ່າດອກບົວມາຈາກບຶງ ສານອາຫານທີ່ມັນຕ້ອງການກໍລ້ວນແລ້ວແຕ່ມາຈາກບ່ອນນັ້ນເຊັ່ນກັນ. ມັນເປັນພຽງແຕ່ວ່າ ດອກບົວສາມາດປິດບັງຕົວມັນເອງ ແລະ ດ້ວຍເຫດນັ້ນ ມັນຈຶ່ງສາມາດສະໜອງຄວາມສວຍງາມໃຫ້ແກ່ສາຍຕາຜູ້ຄົນ. ຫຼາຍຄົນເຫັນແຕ່ຄວາມງາມພາຍນອກຂອງດອກບົວ ແຕ່ບໍ່ມີໃຜເຫັນຊີວິດທີ່ຖືກປິດບັງພາຍໃນມັນນັ້ນສົກກະປົກ ແລະ ບໍ່ບໍລິສຸດສໍ່າໃດ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ ມັນມີແຕ່ຊື່ເທົ່ານັ້ນ ແລະ ບໍ່ມີແກ່ນແທ້ຫຍັງເລີຍ, ນັ້ນແມ່ນຖືກຕ້ອງ ແລະ ແທ້ຈິງທີ່ສຸດ. ນີ້ບໍ່ແມ່ນສິ່ງທີ່ປະຊາຊົນຂອງພຣະເຈົ້າເປັນຢູ່ໃນປັດຈຸບັນບໍ? ການອ່ອນນ້ອມຂອງພວກເຂົາ ແລະ ຄວາມເຊື່ອທີ່ມີຕໍ່ພຣະເຈົ້າແມ່ນເປັນພຽງຜິວເຜີນເທົ່ານັ້ນ. ເມື່ອຢູ່ຕໍ່ໜ້າພຣະເຈົ້າ, ພວກເຂົາຈະປະຈົບປະແຈງ ແລະ ພາກັນແຫ່ຂະບວນ ເພື່ອເຮັດໃຫ້ພຣະເຈົ້າພໍໃຈກັບພວກເຂົາ; ຢ່າງໃດກໍຕາມ, ທາງດ້ານໃນ ຂອງພວກເຂົາແມ່ນເຕັມໄປດ້ວຍອຸປະນິໄສແບບຊາຕານທີ່ເສື່ອມຊາມ ແລະ ທ້ອງຂອງພວກເຂົາກໍເຕັມໄປດ້ວຍຄວາມບໍ່ບໍລິສຸດ. ນີ້ແມ່ນເຫດຜົນທີ່ເປັນຫຍັງພຣະເຈົ້າຈຶ່ງມີຄຳຖາມຕໍ່ມະນຸດວ່າ ຄວາມຈົງຮັກພັກດີຂອງພວກເຂົາທີ່ມີຕໍ່ພຣະເຈົ້ານັ້ນແມ່ນບໍ່ບໍລິສຸດ ຫຼື ບໍລິສຸດ ແລະ ຈິງໃຈກັນແທ້. ເມື່ອພວກເຂົາເປັນຜູ້ຮັບໃຊ້ບໍລິການ, ຫຼາຍຄົນແມ່ນສັນລະເສີນພຣະເຈົ້າດ້ວຍສຽງດັງ ແຕ່ໃນໃຈຂອງພວກເຂົາແມ່ນພາກັນສາບແຊ່ງພຣະອົງ. ດ້ວຍຄຳເວົ້າຂອງພວກເຂົາ, ພວກເຂົາແມ່ນອ່ອນນ້ອມຕໍ່ພຣະເຈົ້າ ແຕ່ໃນໃຈຂອງພວກເຂົາ ພວກເຂົາບໍ່ເຊື່ອຟັງພຣະອົງ. ປາກຂອງພວກເຂົາເວົ້າແຕ່ສິ່ງບໍ່ດີ ແລະ ໃນໃຈຂອງພວກເຂົາກໍມີແຕ່ຕໍ່ຕ້ານພຣະເຈົ້າ. ຍັງມີຜູ້ຄົນເຖິງກັບມີການກະທຳຢ່າງເປັນລະບົບ ເຊັ່ນ: ພວກເຂົາປ່ອຍຄຳເວົ້າທີ່ຫຍາບຄາຍດ້ວຍປາກຂອງພວກເຂົາ ແລະ ສະແດງທ່າທາງດ້ວຍມືຂອງພວກເຂົາ, ຂາດສິນທຳທີ່ສຸດ ເຊິ່ງມັນສະແດງໃຫ້ເຫັນເຖິງສີໜ້າອັນສົດໃສ ແລະ ຊີວິດກ່ຽວກັບໃບໜ້າອັນແທ້ຈິງຂອງມັງກອນແດງທີ່ຍິ່ງໃຫຍ່. ຜູ້ຄົນດັ່ງກ່າວແມ່ນຄູ່ຄວນແລ້ວທີ່ຈະຖືກເອີ້ນວ່າ ລູກຫຼານແທ້ຈິງຂອງມັງກອນແດງທີ່ຍິ່ງໃຫຍ່. ຢ່າງໃດກໍຕາມ, ໃນປັດຈຸບັນ ພວກເຂົາຢືນຢູ່ໃນບ່ອນຂອງຜູ້ຮັບໃຊ້ບໍລິການທີ່ຈົງຮັກພັກດີ ແລະ ເຮັດຄືກັບວ່າ ພວກເຂົາແມ່ນປະຊາຊົນທີ່ຈົງຮັກພັກດີຕໍ່ພຣະເຈົ້າ. ຈັ່ງແມ່ນບໍ່ມີຢາງອາຍ! ແຕ່ນີ້ແມ່ນບໍ່ແປກເລີຍ; ພວກເຂົາມາຈາກບຶງ, ສະນັ້ນ ຈຶ່ງບໍ່ສາມາດຊ່ວຍໄດ້ ນອກຈາກຈະສະແດງທາດແທ້ຂອງພວກເຂົາໃນລັກສະນະນີ້. ຍ້ອນພຣະເຈົ້າສັກສິດ, ບໍລິສຸດ, ມີຄວາມເປັນຈິງ ແລະ ແທ້ຈິງ, ເນື້ອໜັງຂອງພຣະອົງຈຶ່ງມາຈາກພຣະວິນຍານ. ນີ້ແມ່ນສິ່ງທີ່ແນ່ນອນ ແລະ ບໍ່ສາມາດປ່ຽນແປງໄດ້. ພຣະອົງບໍ່ພຽງແຕ່ຈະສາມາດເປັນພະຍານໃຫ້ແກ່ພຣະເຈົ້າເທົ່ານັ້ນ ແຕ່ຍັງສາມາດອຸທິດພຣະອົງເອງທັງໝົດເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ: ສິ່ງເຫຼົ່ານີ້ແມ່ນສະແດງໃຫ້ເຫັນອີກດ້ານຂອງແກ່ນແທ້ຂອງພຣະເຈົ້າ. ການທີ່ເນື້ອໜັງມາຈາກພຣະວິນຍານພ້ອມກັບພາບລັກແມ່ນໝາຍຄວາມວ່າ ເນື້ອໜັງທີ່ພຣະວິນຍານເອົາມາຫໍ່ຫຸ້ມຕົວພຣະອົງເອງນັ້ນແມ່ນແຕກຕ່າງຈາກເນື້ອໜັງຂອງ

ມະນຸດຢ່າງແທ້ຈິງ ແລະ ຄວາມແຕກຕ່າງນີ້ໂດຍສ່ວນໃຫຍ່ແລ້ວແມ່ນຢູ່ໃນຈິດໃຈຂອງພວກເຂົາ. ຄວາມໝາຍຂອງ ຄຳວ່າ "ພຣະວິນຍານພ້ອມກັບພາບລັກ" ແມ່ນໝາຍເຖິງການປົກຄຸມໄປດ້ວຍຄວາມເປັນມະນຸດແບບປົກກະຕິ ແລະ ດ້ວຍສິ່ງນີ້ ຄວາມສັກສິດຈຶ່ງສາມາດປະຕິບັດພາລະກິດຢ່າງປົກກະຕິຈາກພາຍໃນເນື້ອໜັງໄດ້. ສິ່ງນີ້ບໍ່ໄດ້ເໜືອທຳມະຊາດແມ່ນແຕ່ໜ້ອຍດຽວ ແລະ ບໍ່ໄດ້ຖືກຈຳກັດດ້ວຍຄວາມເປັນມະນຸດ. "ພາບລັກຂອງພຣະວິນຍານ" ແມ່ນໝາຍເຖິງຄວາມສັກສິດທີ່ສົມບູນ ແລະ ບໍ່ຖືກຈຳກັດດ້ວຍຄວາມເປັນມະນຸດ. ສະນັ້ນ, ອຸປະນິໄສທີ່ມີຢູ່ໂດຍທຳມະຊາດຂອງພຣະເຈົ້າ ແລະ ພາບລັກທີ່ແທ້ຈິງແມ່ນສາມາດດຳລົງຢູ່ໃນເນື້ອໜັງທີ່ບັງເກີດເປັນມະນຸດຢ່າງສົມບູນ ເຊິ່ງບໍ່ພຽງແຕ່ຈະປົກກະຕິ ແລະ ໝັ້ນຄົງເທົ່ານັ້ນ ແຕ່ຍັງມີລິດທານຸພາບ ແລະ ຄວາມໂກດຮ້າຍ. ເນື້ອໜັງທີ່ບັງເກີດເປັນມະນຸດຄັ້ງທຳອິດແມ່ນພຽງສາມາດສະແດງເຖິງພຣະເຈົ້າໃນຈິນຕະນາການຂອງຜູ້ຄົນເທົ່ານັ້ນ; ນັ້ນກໍຄື ພຣະອົງສາມາດເຮັດໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ກ່າວຄຳທຳນາຍ. ສະນັ້ນ, ພຣະອົງບໍ່ໄດ້ດຳລົງຢູ່ໃນຄວາມເປັນຈິງຂອງພຣະເຈົ້າຢ່າງສົມບູນ ແລະ ດ້ວຍເຫດນັ້ນຈຶ່ງບໍ່ແມ່ນຕົວຕົນຂອງພຣະວິນຍານທີ່ມີພາບລັກ; ພຣະອົງແມ່ນການປາກົດຕົວຂອງຄວາມສັກສິດໂດຍກົງ. ຍິ່ງໄປກວ່ານັ້ນ, ຍ້ອນພຣະອົງຢູ່ເໜືອກວ່າຄວາມເປັນມະນຸດທຳມະດາ, ພຣະອົງຈຶ່ງບໍ່ຖືກເອີ້ນວ່າເປັນພຣະເຈົ້າທີ່ແທ້ຈິງຢ່າງສົມບູນ ແຕ່ວ່າພຣະອົງແມ່ນມີພຣະເຈົ້າທີ່ເລື່ອນລອຍໃນສະຫວັນໃນຕົວພຣະອົງເລັກນ້ອຍ; ພຣະອົງຄືພຣະເຈົ້າຈາກແນວຄິດຂອງປະຊາຊົນ. ນີ້ແມ່ນຄວາມແຕກຕ່າງທີ່ແທ້ຈິງລະຫວ່າງເນື້ອໜັງທີ່ບັງເກີດເປັນມະນຸດຄັ້ງທຳອິດ ແລະ ຄັ້ງທີສອງ.

ຈາກຈຸດສູງສຸດໃນຈັກກະວານ, ພຣະເຈົ້າເຝົ້າເບິ່ງທຸກການເຄື່ອນໄຫວຂອງມະນຸດ ແລະ ທຸກສິ່ງທີ່ຜູ້ຄົນເວົ້າ ແລະ ເຮັດ. ພຣະອົງຍັງສັງເກດເບິ່ງຄວາມຄິດທີ່ຢູ່ໃນສ່ວນເລິກຂອງຫົວໃຈຂອງພວກເຂົາດ້ວຍຄວາມຊັດເຈນແທ້ຈິງ, ບໍ່ເຄີຍເບິ່ງຂ້າມ; ສະນັ້ນ, ພຣະທຳຂອງພຣະອົງຈຶ່ງຕັດເຂົ້າໄປໃນໃຈຂອງຜູ້ຄົນ, ໂຈມຕີໃສ່ທຸກຄວາມຄິດຂອງພວກເຂົາ ແລະ ພຣະທຳຂອງພຣະເຈົ້າແມ່ນຫຼັກແຫຼມ ແລະ ບໍ່ມີຂໍ້ຜິດພາດ. "ເຖິງວ່າຜູ້ຄົນຈະ 'ຮູ້ຈັກ' ພຣະວິນຍານຂອງເຮົາ ແຕ່ພວກເຂົາກໍຍັງລ່ວງເກີນພຣະວິນຍານຂອງເຮົາ. ພຣະທຳຂອງເຮົາເປີດເຜີຍໃບໜ້າອັນຂີ້ຮ້າຍຂອງທຸກຄົນ ພ້ອມກັບຄວາມຄິດໃນສ່ວນເລິກຂອງຫົວໃຈຂອງພວກເຂົາ ແລະ ເຮັດໃຫ້ທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກລົ້ມລົງໃນທ່າມກາງການກວດສອບຂອງເຮົາ". ຈາກສິ່ງນີ້ ມັນຈຶ່ງພິສູດໃຫ້ເຫັນວ່າ ເຖິງວ່າຄວາມຕ້ອງການຂອງພຣະເຈົ້າ ທີ່ມີຕໍ່ມະນຸດຈະບໍ່ຮຽກຮ້ອງຫຼາຍ ແຕ່ຜູ້ຄົນກໍຍັງບໍ່ສາມາດທົນຕໍ່ການກວດສອບຂອງພຣະວິນຍານຂອງພຣະເຈົ້າ. "ຢ່າງໃດກໍຕາມ, ເຖິງຈະລົ້ມລົງ ແຕ່ໃຈຂອງພວກເຂົາກໍບໍ່ກ້າທີ່ຈະຫຼົງທາງຈາກເຮົາ. ໃນທ່າມກາງວັດຖຸຂອງການຊົງສ້າງ, ມີໃຜແດ່ທີ່ບໍ່ຮັກເຮົາ ຍ້ອນການກະທຳຂອງເຮົາ?" ສິ່ງນີ້ຍິ່ງຊີ້ໃຫ້ເຫັນເຖິງສະຕິປັນຍາ ແລະ ລິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ຈຶ່ງໄດ້ເປີດເຜີຍທຸກສິ່ງທີ່ປະຊາຊົນຂອງພຣະເຈົ້າຄິດ ໃນຖານະທີ່ພວກເຂົາເປັນຜູ້ຮັບໃຊ້ບໍລິການ: ຫຼັງຈາກການເຮັດ "ການຄ້າ" ລົ້ມເຫຼວ, ຈຳນວນຕົວເລກ "ຫຼາຍແສນ" ຫຼື "ລ້ານ" ໃນຫົວຂອງພວກເຂົາກໍຈະບໍ່ມີປະໂຫຍດຫຍັງ. ຢ່າງໃດກໍຕາມ, ຍ້ອນບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າ ແລະ ຍ້ອນ

ລິດທານຸພາບ ແລະ ຄວາມໂກດຮ້າຍຂອງພຣະເຈົ້າ ເຖິງແມ່ນວ່າ ພວກເຂົາຈະເຮັດຄຳຕົກດ້ວຍຄວາມໂສກເສົ້າ ແຕ່ພວກເຂົາກໍຍັງຮັບໃຊ້ພຣະເຈົ້າດ້ວຍທັດສະນະຄະຕິທີ່ບໍ່ດີ ແລະ ການປະຕິບັດທັງໝົດຂອງພວກເຂົາໃນອະດີດໄດ້ກາຍເປັນການເວົ້າທີ່ວ່າງເປົ່າ ແລະ ຖືກລືມໄປຢ່າງສິ້ນເຊີງ. ກົງກັນຂ້າມ, ເພື່ອໃຫ້ຄວາມສຸກກັບພວກເຂົາເອງ, ເພື່ອຂ້າເວລາ ຫຼື ຢູ່ລ້າໆ, ພວກເຂົາແມ່ນໄດ້ເຮັດສິ່ງຕ່າງໆຕາມໃຈ ທີ່ເຮັດໃຫ້ພວກເຂົາ ແລະ ທຸກຄົນມີຄວາມສຸກ... ນີ້ແມ່ນສິ່ງທີ່ເກີດຂຶ້ນຢ່າງແທ້ຈິງໃນທ່າມກາງມະນຸດ. ສະນັ້ນ, ພຣະເຈົ້າຈຶ່ງໄດ້ເປີດເຜີຍຕໍ່ມະນຸດ ແລະ ເວົ້າວ່າ "ແມ່ນໃຜທີ່ບໍ່ປາດຖະໜາເຖິງເຮົາຍ້ອນພຣະທຳຂອງເຮົາ? ໃນຜູ້ໃດທີ່ບໍ່ເກີດມີຄວາມຮູ້ສຶກຍຶດຕິດ ຍ້ອນຄວາມຮັກຂອງເຮົາ?" ເວົ້າຕາມກົງ, ມະນຸດແມ່ນເຕັມໃຈທີ່ຈະຍອມຮັບເອົາພຣະທຳຂອງພຣະເຈົ້າ ແລະ ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ບໍ່ມັກອ່ານພຣະທຳຂອງພຣະເຈົ້າ; ມັນເປັນພຽງແຕ່ວ່າ ພວກເຂົາບໍ່ສາມາດເອົາພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ, ເນື່ອງຈາກວ່າ ພວກເຂົາຖືກທຳມະຊາດຂອງພວກເຂົາຂັດຂວາງ. ຫຼັງຈາກອ່ານພຣະທຳຂອງພຣະເຈົ້າ, ຫຼາຍຄົນກໍບໍ່ສາມາດທົນໄດ້ທີ່ຈະຈາກພຣະທຳເຫຼົ່ານັ້ນ ແລະ ຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າກໍມີລົ້ນຢູ່ພາຍໃນພວກເຂົາ. ສະນັ້ນ, ພຣະເຈົ້າຈຶ່ງສາບແຊ່ງຊາຕານອີກຄັ້ງໂດຍເປີດເຜີຍໃບໜ້າອັນຂີ້ຮ້າຍຂອງມັນອີກຄັ້ງ. "ເຊິ່ງເປັນຍຸກທີ່ຊາຕານສ້າງຄວາມວຸ້ນວາຍ ແລະກົດຂີ່ຂົ່ມເຫັງຢ່າງບ້າປ່ວງ" ຍັງແມ່ນຍຸກທີ່ພຣະເຈົ້າເລີ່ມພາລະກິດອັນຍິ່ງໃຫຍ່ຂອງພຣະອົງເທິງແຜ່ນໂລກຢ່າງເປັນທາງການ. ຕໍ່ໄປ ພຣະອົງຈະເລີ່ມພາລະກິດໃນການທຳລາຍລ້າງໂລກ. ເວົ້າອີກຢ່າງໜຶ່ງກໍຄື ຍິ່ງຊາຕານແລ່ນອາລະວາດ ມື້ຂອງພຣະເຈົ້າກໍຍິ່ງຈະມາຮອດໄວຂຶ້ນ. ສະນັ້ນ, ຍິ່ງພຣະເຈົ້າເວົ້າເຖິງຄວາມປ່າເຖື່ອນຂອງຊາຕານ ມື້ທີ່ພຣະເຈົ້າຈະທຳລາຍລ້າງໂລກກໍຈະຫຍັບເຂົ້າໃກ້ຍິ່ງຂຶ້ນ. ສິ່ງດັ່ງກ່າວແມ່ນການປະກາດຂອງພຣະເຈົ້າທີ່ມີຕໍ່ຊາຕານ.

ເປັນຫຍັງພຣະເຈົ້າຈຶ່ງເວົ້າຊໍ້າແລ້ວຊໍ້າອີກວ່າ "ຍິ່ງໄປກວ່ານັ້ນ, ລັບຫຼັງເຮົາ ພວກເຂົາກໍຈະພາກັນເຮັດກິດຈະການສົກກະປົກທີ່ 'ເປັນຕາສັນລະເສີນ'. ເຈົ້າຄິດວ່າ ເນື້ອໜັງທີ່ເຮົາໃຊ້ຫົ່ມຫຸ້ມຕົວເອງແມ່ນບໍ່ຮູ້ຫຍັງກ່ຽວກັບການກະທຳ, ພຶດຕິກຳ ແລະ ຄຳເວົ້າຂອງເຈົ້າບໍ?" ພຣະອົງບໍ່ໄດ້ກ່າວພຣະທຳດັ່ງກ່າວພຽງແຕ່ໜຶ່ງ ຫຼື ສອງຄັ້ງເທົ່ານັ້ນ. ເປັນຫຍັງຄືເປັນແບບນັ້ນ? ເມື່ອຜູ້ຄົນຖືກພຣະເຈົ້າປອບໃຈ ແລະຮັບຮູ້ເຖິງຄວາມໂສກເສົ້າຂອງພຣະເຈົ້າທີ່ມີຕໍ່ມວນມະນຸດ, ມັນກໍງ່າຍສຳລັບພວກເຂົາທີ່ຈະລືມອະດີດໃນຂະນະທີ່ພວກເຂົາດົ້ນຮົນໄປຂ້າງໜ້າ. ຢ່າງໃດກໍຕາມ, ພຣະເຈົ້າບໍ່ໄດ້ປານີມະນຸດແມ່ນແຕ່ໜ້ອຍດຽວ: ພຣະອົງສືບຕໍ່ຊີ້ນຳແນວຄວາມຄິດຂອງພວກເຂົາ. ສະນັ້ນ, ພຣະອົງຈຶ່ງບອກຜູ້ຄົນຊໍ້າແລ້ວຊໍ້າອີກເພື່ອໃຫ້ຮູ້ຈັກຕົວເອງ, ເພື່ອຢຸດການມົວເມົາຂອງພວກເຂົາ, ເພື່ອບໍ່ພົວພັນກັບກິດຈະການທີ່ສົກກະປົກທີ່ເປັນຕາສັນລະເສີນດັ່ງກ່າວອີກຕໍ່ໄປ ແລະ ເພື່ອບໍ່ຫຼອກລວງພຣະເຈົ້າໃນເນື້ອໜັງອີກຕໍ່ໄປ. ເຖິງວ່າທຳມະຊາດຂອງຜູ້ຄົນຈະບໍ່ປ່ຽນແປງ ແຕ່ຢ່າງໜ້ອຍມັນກໍມີປະໂຫຍດໃນການເຕືອນພວກເຂົາບາງຄັ້ງຄາວ. ຫຼັງຈາກນີ້ ພຣະເຈົ້າຈະເວົ້າຈາກມຸມມອງຂອງມະນຸດ ເພື່ອເປີດເຜີຍຄວາມເລິກລັບໃນຫົວໃຈຂອງພວກເຂົາ: "ເຮົາໄດ້ທົນຕໍ່ລົມ ແລະ ຝົນເປັນເວລາຫຼາຍປີ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ປະສົບກັບຄວາມຂົມຂື່ນຂອງໂລກມະນຸດ; ຢ່າງໃດກໍຕາມ, ເມື່ອສະທ້ອນເບິ່ງຢ່າງໃກ້ຊິດແລ້ວ, ບໍ່ມີ

ການທົນທຸກໃນຈຳນວນໃດ ທີ່ສາມາດເຮັດໃຫ້ມະນຸດທີ່ຢູ່ໃນເນື້ອໜັງສູນເສຍຄວາມຫວັງໃນຕົວເຮົາເລີຍ, ແລ້ວແຮງໄກທີ່ຄວາມຫວານຈະສາມາດເຮັດໃຫ້ມະນຸດທີ່ຢູ່ໃນເນື້ອໜັງເຢັນຊາ, ທໍ້ແທ້ ຫຼື ປະຕິເສດເຮົາ. ຄວາມຮັກຂອງພວກເຂົາ ທີ່ມີຕໍ່ເຮົາແມ່ນຖືກຈຳກັດຢູ່ທີ່ການຂາດຄວາມທຸກ ຫຼື ການຂາດຄວາມຫວານແທ້ບໍ?" "ທຸກສິ່ງທີ່ຢູ່ກ້ອງດວງຕາເວັນແມ່ນວ່າງເປົ່າ", ແນ່ນອນ ພຣະທຳເຫຼົ່ານີ້ແມ່ນມີຄວາມໝາຍພາຍໃນໂຕ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ ບໍ່ມີຫຍັງສາມາດເຮັດໃຫ້ມະນຸດສູນເສຍຄວາມຫວັງໃນຕົວພຣະອົງ ຫຼື ເຢັນຊາຕໍ່ພຣະອົງ. ຖ້າຜູ້ຄົນບໍ່ຮັກພຣະເຈົ້າ ພວກເຂົາກໍສົມຄວນຕາຍ; ຖ້າພວກເຂົາບໍ່ຮັກພຣະເຈົ້າ ຄວາມອົດທົນຂອງພວກເຂົາກໍຈະບໍ່ມີປະໂຫຍດຫຍັງ ແລະ ຄວາມສຸກທີ່ພວກເຂົາໄດ້ຮັບກໍຈະວ່າງເປົ່າ ແລະ ທຸກສິ່ງກໍຈະເພີ່ມເຂົ້າໃນການເຮັດບາບຂອງພວກເຂົາ. ຍ້ອນບໍ່ມີແມ່ນແຕ່ໜຶ່ງຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ ພຣະອົງຈຶ່ງເວົ້າວ່າ "ຄວາມຮັກຂອງພວກເຂົາ ທີ່ມີຕໍ່ເຮົາແມ່ນຖືກຈຳກັດຢູ່ທີ່ການຂາດຄວາມທຸກ ຫຼື ການຂາດຄວາມຫວານແທ້ບໍ?" ໃນໂລກຂອງມະນຸດຜູ້ໃດສາມາດມີຊີວິດຢູ່ໂດຍທີ່ບໍ່ມີຄວາມທຸກ ຫຼື ຄວາມຫວານແດ່? ຊໍ້າແລ້ວຊໍ້າອີກ ພຣະເຈົ້າໄດ້ເວົ້າວ່າ "ບໍ່ມີມະນຸດແມ່ນແຕ່ໜຶ່ງຄົນ ທີ່ເຄີຍເຫັນໃບໜ້າຂອງເຮົາຢ່າງແທ້ຈິງ ຫຼື ເຄີຍໄດ້ຍິນສຽງຂອງເຮົາຢ່າງແທ້ຈິງ ເນື່ອງຈາກວ່າ ມະນຸດບໍ່ຮູ້ຈັກເຮົາຢ່າງແທ້ຈິງ". ພຣະເຈົ້າເວົ້າວ່າ ມະນຸດບໍ່ຮູ້ຈັກພຣະອົງຢ່າງແທ້ຈິງ ແຕ່ເປັນຫຍັງພຣະອົງຈຶ່ງຂໍໃຫ້ມະນຸດຮູ້ຈັກພຣະອົງ? ສິ່ງນີ້ບໍ່ຂັດແຍ້ງກັນບໍ? ພຣະທຳຂອງພຣະເຈົ້າທຸກຂໍ້ແມ່ນມີຈຸດປະສົງໂດຍສະເພາະ. ຍ້ອນມະນຸດໄດ້ມີຄວາມມຶນຊາ ພຣະເຈົ້າຈຶ່ງນຳໃຊ້ຫຼັກການໃນການເຮັດພາລະກິດຂອງພຣະອົງ 100% ຜ່ານມະນຸດ ເພື່ອໃຫ້ໄດ້ມີ 0.1 ເປີເຊັນຂອງຫົວໃຈແຕ່ລະດວງຂອງພວກເຂົາ. ສິ່ງດັ່ງກ່າວແມ່ນວິທີການທີ່ພຣະເຈົ້າປະຕິບັດພາລະກິດ ແລະ ພຣະເຈົ້າຕ້ອງກະທຳການ ເພື່ອບັນລຸເປົ້າໝາຍຂອງພຣະອົງ. ແນ່ນອນ ນີ້ຍັງແມ່ນສະຕິປັນຍາໃນພຣະທຳຂອງພຣະເຈົ້າອີກດ້ວຍ. ພວກເຈົ້າໄດ້ເຂົ້າໃຈສິ່ງນີ້ແລ້ວບໍ?

ພຣະເຈົ້າກ່າວວ່າ: "ເມື່ອເຮົາເປີດເຜີຍຄວາມເລິກລັບຂອງເຮົາໂດຍກົງ ແລະ ເຮັດໃຫ້ຄວາມປະສົງຂອງເຮົາຊັດເຈນຂຶ້ນໃນເນື້ອໜັງ ພວກເຈົ້າກໍບໍ່ໄດ້ສັງເກດເຫັນສິ່ງນັ້ນ; ພວກເຈົ້າຟັງສຽງ ແຕ່ບໍ່ເຂົ້າໃຈຄວາມໝາຍຂອງພວກມັນ. ເຮົາເຕັມໄປດ້ວຍຄວາມໂສກເສົ້າ. ເຖິງວ່າເຮົາຈະຢູ່ໃນເນື້ອໜັງ ແຕ່ເຮົາບໍ່ສາມາດເຮັດພາລະກິດແຫ່ງພັນທະກິດຂອງເນື້ອໜັງໄດ້". ໃນດ້ານໜຶ່ງ, ຍ້ອນຄວາມມຶນຊາຂອງພວກເຂົາ ພຣະທຳເຫຼົ່ານີ້ຈຶ່ງເຮັດໃຫ້ຜູ້ຄົນລິເລີ່ມຮ່ວມມືກັບພຣະເຈົ້າ; ໃນອີກດ້ານ, ພຣະເຈົ້າແມ່ນເປີດເຜີຍໃບໜ້າທີ່ແທ້ຈິງຂອງຄວາມສັກສິດຂອງພຣະອົງໃນເນື້ອໜັງທີ່ບັງເກີດເປັນມະນຸດ. ຍ້ອນມະນຸດມີວຸດທິພາວະທີ່ຕໍ່າຫຼາຍ, ການເປີດເຜີຍຄວາມສັກສິດໃນຊ່ວງໄລຍະທີ່ພຣະເຈົ້າຢູ່ໃນເນື້ອໜັງຈຶ່ງອີງຕາມຄວາມສາມາດຂອງພວກເຂົາໃນການຍອມຮັບມັນເທົ່ານັ້ນ. ໃນໄລຍະນີ້ຂອງພາລະກິດ, ຄົນສ່ວນຫຼາຍຍັງຄົງບໍ່ສາມາດຍອມຮັບມັນໄດ້ຢ່າງສົມບູນ ເຊິ່ງພຽງພໍທີ່ຈະສະແດງໃຫ້ເຫັນວ່າ ພວກເຂົາບໍ່ສາມາດຮັບມັນໄດ້ສໍ່າໃດ. ສະນັ້ນ, ໃນໄລຍະພາລະກິດນີ້ ຄວາມສັກສິດຈຶ່ງບໍ່ໄດ້ປະຕິບັດໜ້າທີ່ດັ່ງເດີມທັງໝົດຂອງມັນ; ຄວາມສັກສິດພຽງແຕ່ປະຕິບັດໜ້າທີ່ບາງສ່ວນເລັກນ້ອຍເທົ່ານັ້ນ. ນີ້ສະແດງໃຫ້ເຫັນວ່າ ພາລະກິດໃນອະນາຄົດນັ້ນ, ຄວາມສັກສິດຈະຖືກເປີດເຜີຍເທື່ອລະໜ້ອຍຕາມ

ສະພາບການຂອງການຟື້ນຟູຂອງມວນມະນຸດ. ເຖິງຢ່າງໃດກໍຕາມ, ຄວາມສັກສິດບໍ່ໄດ້ເຕີບໃຫຍ່ຂຶ້ນເທື່ອລະໜ້ອຍ; ກົງກັນຂ້າມ, ຄວາມສັກສິດແມ່ນສິ່ງທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດມີມາໂດຍທຳມະຊາດ ແລະ ມັນບໍ່ຄືກັບວຸດທິພາວະຂອງມະນຸດ.

ການສ້າງມະນຸດຂອງພຣະເຈົ້າແມ່ນມີຈຸດປະສົງ ແລະ ຄວາມໝາຍ, ດ້ວຍເຫດນີ້ພຣະເຈົ້າຈຶ່ງກ່າວວ່າ "ຖ້າມວນມະນຸດຖືກທຳລາຍທັງໝົດດ້ວຍຄວາມໂກດຮ້າຍຂອງເຮົາ, ແລ້ວແມ່ນຫຍັງຄືຄວາມສຳຄັນຂອງການຊົງສ້າງສະຫວັນ ແລະ ແຜ່ນດິນໂລກຂອງເຮົາ?" ຫຼັງຈາກມະນຸດໄດ້ເສື່ອມຊາມ, ພຣະເຈົ້າໄດ້ວາງແຜນຮັບເອົາພວກເຂົາຈຳນວນໜຶ່ງ ເພື່ອຄວາມສຸກຂອງພຣະອົງ; ມັນບໍ່ແມ່ນເຈດຕະນາຂອງພຣະອົງ ທີ່ມະນຸດທຸກຄົນຈະຖືກທຳລາຍ ແລະ ພວກເຂົາຈະບໍ່ຖືກກຳຈັດເມື່ອລະເມີດຕໍ່ພຣະດຳລັດແຫ່ງການຄຸ້ມຄອງຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ. ສິ່ງດັ່ງກ່າວບໍ່ແມ່ນຄວາມປະສົງຂອງພຣະເຈົ້າ; ດັ່ງທີ່ພຣະເຈົ້າໄດ້ກ່າວກ່ອນໜ້ານີ້, ສິ່ງນັ້ນຈະບໍ່ມີຄວາມໝາຍຫຍັງ. ກໍຍ້ອນຄຳເວົ້າທີ່ວ່າ "ບໍ່ມີຄວາມໝາຍຫຍັງ" ນີ້ແຫຼະ, ສະຕິປັນຍາຂອງພຣະເຈົ້າຈຶ່ງຖືກເຮັດໃຫ້ຊັດເຈນຂຶ້ນ. ມີຫຍັງທີ່ສຳຄັນຍິ່ງໃຫຍ່ໄປກວ່ານີ້ບໍ ນອກຈາກການເວົ້າ ແລະ ການກະທຳພາລະກິດຂອງພຣະເຈົ້າຜ່ານວິທີທາງຕ່າງໆເພື່ອຂ້ຽນຕີ, ພິພາກສາ ແລະ ໂຈມຕີທຸກຄົນ ເພື່ອພຽງຫວັງຄັດເລືອກເອົາຜູ້ທີ່ຮັກພຣະອົງຢ່າງແທ້ຈິງ? ຍ້ອນວິທີການນີ້ ການກະທຳຂອງພຣະເຈົ້າຈຶ່ງຖືກເປີດເຜີຍ ແລະ ດ້ວຍເຫດນັ້ນ ການສ້າງມະນຸດກໍຈຶ່ງມີຄວາມໝາຍຍິ່ງຂຶ້ນ. ສະນັ້ນ, ຈຶ່ງມີການເວົ້າວ່າ ພຣະທຳຂອງພຣະເຈົ້າສ່ວນໃຫຍ່ພຽງແຕ່ລອຍຜ່ານພວກເຂົາ; ນີ້ກໍເພື່ອບັນລຸເປົ້າໝາຍ ແລະ ສິ່ງນີ້ແມ່ນຄວາມເປັນຈິງກ່ຽວກັບສ່ວນໜຶ່ງຂອງພຣະທຳຂອງພຣະອົງ.

# ບົດເສີມທີ

# ບົດທີ 1

ສິ່ງທີ່ເຮົາຂໍໃຫ້ພວກເຈົ້າເຮັດແມ່ນບໍ່ແມ່ນທິດສະດີທີ່ເລື່ອນລອຍ ແລະ ເປົ່າວ່າງທີ່ເຮົາກ່າວເຖິງ ແລະ ມັນບໍ່ແມ່ນສິ່ງທີ່ສະໝອງຂອງມະນຸດຄິດບໍ່ເຖິງ ຫຼື ບໍ່ແມ່ນສິ່ງທີ່ເນື້ອໜັງຂອງມະນຸດບັນລຸບໍ່ໄດ້. ແມ່ນໃຜສາມາດຈົງຮັກພັກດີພາຍໃນເຮືອນຂອງເຮົາຢ່າງສົມບູນ? ແມ່ນໃຜສາມາດຖວາຍທຸກສິ່ງຂອງພວກເຂົາພາຍໃນອານາຈັກຂອງເຮົາ? ຖ້າບໍ່ແມ່ນຍ້ອນການເປີດເຜີຍຄວາມປະສົງຂອງເຮົາ ເຈົ້າຈະຮຽກຮ້ອງຕົວເອງໃຫ້ປະຕິບັດຕາມໃຈຂອງເຮົາຢ່າງແທ້ຈິງບໍ? ບໍ່ມີໃຜເຄີຍເຂົ້າໃຈໃຈຂອງເຮົາ ແລະ ບໍ່ມີໃຜເຄີຍເຫັນຄວາມປະສົງຂອງເຮົາ. ແມ່ນໃຜເຄີຍເຫັນໃບໜ້າ ຫຼື ໄດ້ຍິນສຽງຂອງເຮົາແນ່? ເປໂຕບໍ? ຫຼື ໂປໂລບໍ? ຫຼື ໂຢຮັນບໍ? ຫຼື ຢາໂຄບບໍ? ແມ່ນໃຜເຄີຍຖືກເຮົາຫໍ່ຫຸ້ມ ຫຼື ຖືກເຮົາຄອບຄອງ ຫຼື ຖືກເຮົາໃຊ້ແນ່? ເຖິງວ່າ ຄັ້ງທຳອິດທີ່ເຮົາໄດ້ກາຍເປັນເນື້ອໜັງແມ່ນຢູ່ໃນຄວາມສັກສິດ ແຕ່ເນື້ອໜັງທີ່ເຮົາເອົາຫໍ່ຫຸ້ມຕົວເອງແມ່ນບໍ່ຮູ້ເຖິງຄວາມທົນທຸກຂອງມະນຸດ ຍ້ອນເຮົາບໍ່ໄດ້ບັງເກີດຢູ່ໃນຮູບຮ່າງໃດໜຶ່ງ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ສາມາດເວົ້າໄດ້ວ່າ ເນື້ອໜັງເຮັດຄວາມປະສົງຂອງເຮົາຢ່າງສົມບູນ. ເມື່ອຄວາມສັກສິດຂອງເຮົາສາມາດເຮັດດັ່ງທີ່ເຮົາຈະເຮັດ ແລະ ເວົ້າດັ່ງທີ່ເຮົາຈະເວົ້າໃນບຸກຄົນທີ່ມີຄວາມເປັນມະນຸດປົກກະຕິເທົ່ານັ້ນ, ໂດຍທີ່ບໍ່ມີອຸປະສັກ ຫຼື ສິ່ງກີດຂວາງ ຈຶ່ງຈະສາມາດເວົ້າໄດ້ວ່າ ຄວາມປະສົງຂອງເຮົາຖືກເຮັດໃນເນື້ອໜັງ. ຍ້ອນຄວາມເປັນມະນຸດທຳມະດາຂອງເຮົາສາມາດປ້ອງກັນຄວາມສັກສິດຂອງເຮົາ, ດ້ວຍເຫດນັ້ນ ເປົ້າໝາຍຂອງເຮົາໃນການອ່ອນນ້ອມ ແລະ ລີ້ລັບຈຶ່ງໄດ້ບັນລຸ. ໃນຊ່ວງຂັ້ນຕອນຂອງພາລະກິດໃນເນື້ອໜັງ, ເຖິງວ່າ ຄວາມສັກສິດຈະກະທຳໂດຍກົງ ແຕ່ການກະທຳດັ່ງກ່າວກໍບໍ່ງ່າຍທີ່ຜູ້ຄົນຈະແນມເຫັນ ເຊິ່ງເປັນພຽງຍ້ອນຊີວິດ ແລະ ການກະທຳຂອງຄວາມເປັນມະນຸດທຳມະດາ. ພຣະເຈົ້າທີ່ບັງເກີດເປັນມະນຸດນີ້ບໍ່ສາມາດອົດອາຫານເປັນເວລາ 40 ມື້ ຄືກັບພຣະເຈົ້າທີ່ບັງເກີດເປັນມະນຸດຄັ້ງທຳອິດ ແຕ່ເຮັດພາລະກິດ ແລະ ເວົ້າແບບທຳມະດາ; ເຖິງວ່າ ພຣະອົງຈະເປີດເຜີຍສິ່ງລຶກລັບ ແຕ່ພຣະອົງກໍທຳມະດາຫຼາຍ; ມັນບໍ່ໄດ້ເປັນດັ່ງທີ່ຜູ້ຄົນຈິນຕະນາການ, ສຽງຂອງພຣະອົງບໍ່ໄດ້ຄ້າຍຄືກັບສຽງຟ້າຮ້ອງ, ໃບໜ້າຂອງພຣະອົງບໍ່ໄດ້ເຫຼື້ອມຍິບໆດ້ວຍແສງ ແລະ ສະຫວັນບໍ່ໄດ້ສັ່ນສະເທືອນເມື່ອພຣະອົງຍ່າງ. ຖ້າເປັນເຊັ່ນນັ້ນ ແລ້ວໃນສິ່ງນີ້ກໍຈະບໍ່ມີສິ່ງໃດທີ່ມາຈາກສະຕິປັນຍາຂອງເຮົາ ແລະ ມັນກໍເບິ່ງຄືເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ຊາຕານອັບອາຍ ແລະ ເອົາຊະນະມັນໄດ້.

ເມື່ອເຮົາສະແດງຄວາມສັກສິດຂອງເຮົາຢູ່ດ້ານຫຼັງສິ່ງປ້ອງກັນຄວາມເປັນມະນຸດທຳມະດາ ເຮົາແມ່ນໄດ້ຮັບການສັນລະເສີນຢ່າງສູງສຸດ, ພາລະກິດທີ່ຍິ່ງໃຫຍ່ຂອງເຮົາໄດ້ສຳເລັດ ແລະ ບໍ່ມີສິ່ງໃດທີ່ມີຄວາມຫຍຸ້ງຍາກ. ນີ້ກໍຍ້ອນວ່າ ເປົ້າໝາຍຂອງການບັງເກີດເປັນມະນຸດຂອງເຮົາໂດຍສ່ວນໃຫຍ່ແລ້ວແມ່ນເພື່ອຍອມໃຫ້ທຸກຄົນທີ່ເຊື່ອໃນຕົວເຮົາເຫັນການກະທຳຂອງຄວາມສັກສິດຂອງເຮົາທີ່ຢູ່ໃນເນື້ອໜັງ ແລະ ເພື່ອເຫັນພຣະເຈົ້າທີ່ແທ້ຈິງ ເຊິ່ງດ້ວຍເຫດນັ້ນ ຈຶ່ງກຳຈັດສະຖານທີ່ພາຍໃນຈິດໃຈຂອງຜູ້ຄົນ ທີ່ຖືກຄອບຄອງໂດຍພຣະເຈົ້າທີ່ແນມບໍ່ເຫັນ ແລະ ສຳຜັດບໍ່ໄດ້. ຍ້ອນເຮົາກິນ, ນຸ່ງຫົ່ມໃຫ້ຕົວເອງ,

ນອນ, ຄິດ ແລະ ກະທຳຄືກັບຄົນທຳມະດາ, ຍ້ອນເຮົາເວົ້າ ແລະ ຫົວຄືກັບຄົນທຳມະດາ ແລະ ມີຄວາມຈຳເປັນຄືກັບຄົນທຳມະດາ ແລະ ຍັງມີແກ່ນແທ້ຂອງຄວາມສັກສິດທີ່ສົມບູນ ເຮົາຈຶ່ງຖືກເອີ້ນວ່າ "ພຣະເຈົ້າທີ່ແທ້ຈິງ". ນີ້ບໍ່ແມ່ນທິດສະດີ ແລະ ສິ່ງດັ່ງກ່າວນີ້ກໍເຂົ້າໃຈງ່າຍ; ໃນສິ່ງນີ້ແມ່ນສາມາດເຫັນສ່ວນທີ່ມີໃຈກາງຂອງພາລະກິດຂອງເຮົາ ແລະ ໄລຍະຂອງພາລະກິດທີ່ມີການເອົາໃຈໃສ່ຂອງເຮົາ. ການເປີດເຜີຍຄວາມສັກສິດຂອງເຮົາຜ່ານຄວາມເປັນມະນຸດທຳມະດາ ແມ່ນເປົ້າໝາຍຫຼັກຂອງການບັງເກີດເປັນມະນຸດຂອງເຮົາ. ມັນບໍ່ຍາກທີ່ຈະເຫັນວ່າ ໃຈກາງຂອງພາລະກິດຂອງເຮົາແມ່ນຢູ່ໃນສ່ວນທີສອງຂອງຍຸກແຫ່ງການພິພາກສາ.

ໃນຕົວເຮົາແມ່ນບໍ່ເຄີຍມີຊີວິດມະນຸດ ຫຼື ຮ່ອງຮອຍຂອງມະນຸດ. ຊີວິດມະນຸດແມ່ນບໍ່ເຄີຍມີບ່ອນໃນຕົວເຮົາ ແລະ ບໍ່ເຄີຍຢັບຢັ້ງການເປີດເຜີຍຂອງຄວາມສັກສິດຂອງເຮົາ. ສະນັ້ນ, ຍິ່ງເຮົາສະແດງສຽງຂອງເຮົາອອກໄປໃນສະຫວັນ ແລະ ຄວາມປະສົງຂອງພຣະວິນຍານຂອງເຮົາ ຊາຕານຍິ່ງອັບອາຍ ແລະ ດ້ວຍເຫດນັ້ນ ມັນຈຶ່ງງ່າຍຂຶ້ນທີ່ຈະເຮັດຄວາມປະສົງຂອງເຮົາໃນຄວາມເປັນມະນຸດທຳມະດາ. ສິ່ງນີ້ເທົ່ານັ້ນທີ່ໄດ້ເອົາຊະນະຊາຕານ ແລະ ຊາຕານໄດ້ຮັບຄວາມອັບອາຍທີ່ສຸດແລ້ວ. ເຖິງວ່າ ເຮົາຈະລີ້ລັບ ແຕ່ສິ່ງນີ້ບໍ່ໄດ້ຂັດຂວາງພຣະວັດຈະນະ ແລະ ການກະທຳຂອງຄວາມສັກສິດຂອງເຮົາ ເຊິ່ງນີ້ກໍພຽງພໍທີ່ຈະສະແດງໃຫ້ເຫັນວ່າ ເຮົາໄດ້ຮັບໄຊຊະນະ ແລະ ຮັບການສັນລະເສີນຢ່າງສົມບູນ. ຍ້ອນພາລະກິດຂອງເຮົາໃນເນື້ອໜັງແມ່ນບໍ່ມີອຸປະສັກ ແລະ ຍ້ອນວ່າ ພຣະເຈົ້າທີ່ແທ້ຈິງໃນຕອນນີ້ມີບ່ອນໃນໃຈຂອງຜູ້ຄົນ ແລະ ໄດ້ວາງຮາກຖານໃນໃຈຂອງພວກເຂົາ ມັນຈຶ່ງພິສູດຢ່າງຄົບຖ້ວນວ່າ ເຮົາໄດ້ເອົາຊະນະຊາຕານ. ຍ້ອນຊາຕານບໍ່ສາມາດເຮັດຫຍັງອີກທ່າມກາງມະນຸດ ແລະ ຍ້ອນມັນຍາກທີ່ຈະປູກຝັງຄຸນນະພາບຂອງຊາຕານໃນເນື້ອໜັງຂອງມະນຸດ, ຄວາມປະສົງຂອງເຮົາຈຶ່ງດຳເນີນໂດຍບໍ່ມີອຸປະສັກ. ເນື້ອຫາຂອງພາລະກິດຂອງເຮົາໂດຍສ່ວນໃຫຍ່ແລ້ວ ແມ່ນເພື່ອເຮັດໃຫ້ທຸກຄົນເຫັນການກະທຳທີ່ມະຫັດສະຈັນຂອງເຮົາ ແລະ ເຫັນໃບໜ້າທີ່ແທ້ຈິງຂອງເຮົາ: ບໍ່ແມ່ນວ່າຈະເອື້ອມບໍ່ເຖິງເຮົາ, ເຮົາບໍ່ໄດ້ສູງເທົ່າຟ້າ ແລະ ບໍ່ແມ່ນວ່າເຮົາຊິບໍ່ມີຮູບແບບ ແລະ ຮູບຮ່າງທີ່ແນ່ນອນ. ເຮົາບໍ່ໄດ້ວ່າຊິບໍ່ມີຕົວຕົນຄືອາກາດ ແລະ ເຮົາບໍ່ຄືກັບເມກທີ່ລອຍໄປມາ ທີ່ຈະຖືກພັດໄປຢ່າງງ່າຍດາຍ; ໃນທາງກົງກັນຂ້າມ ເຖິງວ່າ ເຮົາຈະອາໄສຢູ່ທ່າມກາງ ແລະ ປະສົບກັບຄວາມຫວານ, ຄວາມສົ້ມ, ຄວາມຂົມ ແລະ ຄວາມເຜັດຮ້ອນໃນທ່າມກາງມະນຸດ ແຕ່ເນື້ອໜັງຂອງເຮົາໂດຍພື້ນຖານແລ້ວ ແມ່ນແຕກຕ່າງຈາກຂອງມະນຸດ. ຄົນສ່ວນໃຫຍ່ມີຄວາມລຳບາກໃນການພົວພັນກັບເຮົາ ແຕ່ຄົນສ່ວນໃຫຍ່ກໍຍັງສະແຫວງຫາທີ່ຈະພົວພັນກັບເຮົາ. ມັນຄືກັບວ່າ ມີຄວາມລຶກລັບທີ່ໃຫຍ່ຫຼວງ ແລະ ບໍ່ສາມາດຢັ່ງເຖິງພາຍໃນພຣະເຈົ້າທີ່ບັງເກີດເປັນມະນຸດ. ຍ້ອນການເປີດເຜີຍຄວາມສັກສິດໂດຍກົງ ແລະ ຍ້ອນສິ່ງປ້ອງກັນຂອງຮູບຮ່າງຂອງມະນຸດ ຜູ້ຄົນຈຶ່ງຢູ່ຫ່າງຈາກເຮົາດ້ວຍຄວາມຢຳເກງ ໂດຍເຊື່ອວ່າ ເຮົາເປັນພຣະເຈົ້າທີ່ມີຄວາມເມດຕາ ແລະ ເປັນທີ່ຮັກ ແຕ່ກໍຍັງຢ້ານລິດທານຸພາບ ແລະ ຄວາມໂມໂຫຂອງເຮົາ. ສະນັ້ນ, ໃນໃຈຂອງພວກເຂົາ, ພວກເຂົາແມ່ນປາດຖະໜາທີ່ຈະເວົ້າກັບເຮົາຢ່າງຈິງຈັງ ແຕ່ພວກເຂົາກໍບໍ່ສາມາດເຮັດຕາມທີ່ພວກເຂົາປາດຖະໜາໄດ້. ສິ່ງທີ່ໃຈຂອງພວກເຂົາຕ້ອງການ ແຕ່ພາລະກຳລັງຂອງ

ພວກເຂົາພັດຂາດຫາຍ. ນີ້ແມ່ນສະພາບຂອງທຸກຄົນໃນສະຖານະການດັ່ງກ່າວນີ້ ແລະ ຍິ່ງຜູ້ຄົນເປັນແບບນີ້ ຂໍ້ພິສູດແຫ່ງການເປີດເຜີຍແງ່ມຸມທີ່ຫຼາກຫຼາຍຂອງອຸປະນິໄສຂອງເຮົາແຮ່ງຍິ່ງໃຫຍ່ ເຊິ່ງດ້ວຍເຫດນັ້ນ ຈຶ່ງເປັນການບັນລຸເປົ້າໝາຍຂອງຜູ້ຄົນໃນການຮູ້ຈັກພຣະເຈົ້າ. ແຕ່ສິ່ງນີ້ເປັນສິ່ງສຳຮອງ; ສິ່ງທີ່ສຳຄັນແມ່ນການເຮັດໃຫ້ຜູ້ຄົນຮູ້ຈັກການກະທຳທີ່ມະຫັດສະຈັນຂອງເຮົາຈາກການກະທຳຂອງເນື້ອໜັງຂອງເຮົາ ເຊິ່ງເຮັດໃຫ້ພວກເຂົາຮູ້ຈັກແກ່ນແທ້ຂອງພຣະເຈົ້າ. ເຮົາບໍ່ຜິດປົກກະຕິ ແລະ ເໜືອທຳມະຊາດຕາມທີ່ຜູ້ຄົນຈິນຕະນາການກັນ; ກົງກັນຂ້າມ ເຮົາແມ່ນພຣະເຈົ້າທີ່ແທ້ຈິງ ທີ່ທຳມະດາໃນທຸກສິ່ງ. ບ່ອນຂອງເຮົາ ໃນແນວຄວາມຄິດຂອງຜູ້ຄົນແມ່ນຖືກກຳຈັດ ແລະ ພວກເຂົາຮູ້ຈັກເຮົາໃນຄວາມເປັນຈິງ. ຫຼັງຈາກນັ້ນເທົ່ານັ້ນ ເຮົາຈຶ່ງຮັບເອົາບ່ອນທີ່ແທ້ຈິງໃນຈິດໃຈຂອງຜູ້ຄົນ.

ຕໍ່ໜ້າທຸກຄົນ ເຮົາບໍ່ພຽງແຕ່ບໍ່ເຄີຍເຮັດສິ່ງໃດທີ່ເໜືອທຳມະຊາດທີ່ຜູ້ຄົນຖະໜອມ ແຕ່ເຮົາກໍຍັງປົກກະຕິ ແລະ ທຳມະດາທີ່ສຸດ; ເຮົາຈິງໃຈບໍ່ຍອມໃຫ້ຜູ້ຄົນເຫັນສິ່ງໃດ ທີ່ໄບ້ໃຫ້ເຫັນເຖິງການເປັນພຣະເຈົ້າໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາ. ແຕ່ຍ້ອນພຣະທຳຂອງເຮົາ ຜູ້ຄົນຈຶ່ງຖືກເອົາຊະນະຢ່າງສິ້ນເຊີງ ແລະ ອ່ອນນ້ອມຕໍ່ຄຳພະຍານຂອງເຮົາ. ດ້ວຍເຫດນັ້ນເທົ່ານັ້ນ ຜູ້ຄົນຈຶ່ງຮູ້ຈັກເຮົາໃນເນື້ອໜັງໂດຍບໍ່ມີຄວາມສົງໄສ ແລະ ບົນພື້ນຖານຂອງການເຊື່ອຢ່າງສົມບູນວ່າ ພຣະເຈົ້າມີຢູ່ຢ່າງແທ້ຈິງ. ໃນວິທີນີ້ ຄວາມຮູ້ຂອງຜູ້ຄົນກ່ຽວກັບເຮົາແມ່ນໄດ້ເປັນຈິງຫຼາຍຂຶ້ນ, ຊັດເຈນຂຶ້ນ ແລະ ຢ່າງໜ້ອຍສຸດແມ່ນບໍ່ໄດ້ມີຮອຍດ່າງຈາກການປະພຶດທີ່ດີຂອງພວກເຂົາ; ທຸກຢ່າງແມ່ນຜົນຈາກຄວາມສັກສິດຂອງເຮົາທີ່ກະທຳການໂດຍກົງ ໂດຍມອບຄວາມຮູ້ທີ່ຍິ່ງໃຫຍ່ກ່ຽວກັບຄວາມສັກສິດຂອງເຮົາໃຫ້ແກ່ຜູ້ຄົນ ເນື່ອງຈາກວ່າ ຄວາມສັກສິດເທົ່ານັ້ນ ທີ່ແມ່ນໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ແລະ ແມ່ນຄຸນສົມບັດຂອງພຣະເຈົ້າທີ່ມີຢູ່ໃນຕົວ ເຊິ່ງຜູ້ຄົນຄວນເຫັນສິ່ງນີ້. ສິ່ງທີ່ເຮົາຕ້ອງການແມ່ນພຣະທຳ, ການກະທຳ ແລະ ການປະຕິບັດທີ່ຢູ່ໃນຄວາມສັກສິດ. ເຮົາບໍ່ສົນໃຈຄຳເວົ້າ ແລະ ການກະທຳໃນຄວາມເປັນມະນຸດ. ເປົ້າໝາຍຂອງເຮົາແມ່ນເພື່ອອາໄສຢູ່ ແລະ ປະຕິບັດໃນຄວາມສັກສິດ. ເຮົາບໍ່ປາດຖະໜາທີ່ຈະປັກລັກ ແລະ ແຕກໜໍ່ໃນມະນຸດຊາດ ແລະ ເຮົາບໍ່ປາດຖະໜາທີ່ຈະອາໄສຢູ່ໃນຄວາມເປັນມະນຸດ. ພວກເຈົ້າເຂົ້າໃຈສິ່ງທີ່ເຮົາກຳລັງເວົ້າບໍ? ເຖິງແມ່ນວ່າ ເຮົາຈະແມ່ນແຂກໃນມະນຸດຊາດແຕ່ເຮົາກໍບໍ່ໄດ້ຕ້ອງການສິ່ງນີ້; ເຮົາປະຕິບັດໃນຄວາມສັກສິດທີ່ສົມບູນ ແລະ ໃນວິທີນີ້ເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດເຂົ້າໃຈໃບໜ້າທີ່ແທ້ຈິງຂອງເຮົາດີຂຶ້ນ.

# ບົດທີ 10

ໃນໄລຍະຂອງການສ້າງຄຣິສຕະຈັກ, ພຣະເຈົ້າເກືອບບໍ່ໄດ້ກ່າວເຖິງການສ້າງອານາຈັກເລີຍ. ແມ່ນແຕ່ໃນເວລາທີ່ພຣະອົງກ່າວເຖິງມັນ, ພຣະອົງກໍກ່າວເປັນພາສາຂອງສະໄໝນັ້ນ. ເມື່ອຍຸກແຫ່ງອານາຈັກມາຮອດ, ພຣະເຈົ້າກໍຂີດລຶບບາງວິທີການ ແລະ ຄວາມກັງວົນຂອງຊ່ວງເວລາສ້າງຄຣິສຕະຈັກນັ້ນອອກດ້ວຍການຂີດບາດດຽວ ແລະ ບໍ່ເຄີຍກ່າວເຖິງສິ່ງເຫຼົ່ານັ້ນແມ່ນແຕ່ໜຶ່ງຄຳອີກເລີຍ. ນີ້ແມ່ນຄວາມໝາຍພື້ນຖານອັນແນ່ນອນຂອງຄຳວ່າ "ພຣະເຈົ້າເອງ" ຜູ້ທີ່ໃໝ່ຕະຫຼອດ ແລະ ບໍ່ເຄີຍເກົ່າ. ແທ້ຈິງແລ້ວ ສິ່ງຕ່າງໆທີ່ອາດຖືກເຮັດໃນອະດີດ ພວກມັນຄືສ່ວນໜຶ່ງຂອງຍຸກທີ່ຜ່ານໄປ, ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງຈັດປະເພດຂອງເຫດການໃນອະດີດດັ່ງກ່າວວ່າ ເປັນເຫດການທີ່ໄດ້ເກີດຂຶ້ນໃນຊ່ວງເວລາກ່ອນພຣະຄຣິດ ໃນຂະນະທີ່ຍຸກປັດຈຸບັນແມ່ນຮູ້ຈັກກັນວ່າ ເປັນຊ່ວງເວລາຫຼັງພຣະຄຣິດ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ການສ້າງຄຣິສຕະຈັກແມ່ນສິ່ງທີ່ຈຳເປັນສຳລັບການສ້າງອານາຈັກ; ມັນວາງພື້ນຖານເພື່ອໃຫ້ພຣະເຈົ້າຖືອຳນາດສູງສຸດຂອງພຣະອົງໃນອານາຈັກ. ການສ້າງຄຣິສຕະຈັກແມ່ນຮູບແບບຂອງປັດຈຸບັນ; ພາລະກິດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກສ່ວນໃຫຍ່ແລ້ວແມ່ນສຸມໃສ່ພາກສ່ວນນີ້ ນັ້ນກໍຄືການສ້າງອານາຈັກ. ກ່ອນພຣະອົງໄດ້ສ້າງຄຣິສຕະຈັກສຳເລັດ, ພຣະອົງໄດ້ດຳເນີນການກະກຽມ ສຳລັບພາລະກິດທັງໝົດທີ່ຈະຕ້ອງເຮັດໝົດແລ້ວ ແລະ ເມື່ອເວລາເໝາະສົມ ພຣະອົງກໍໄດ້ເລີ່ມພາລະກິດຂອງພຣະອົງຢ່າງເປັນທາງການ. ນີ້ຄືເຫດຜົນທີ່ພຣະເຈົ້າເວົ້າວ່າ: "ໂດຍພື້ນຖານແລ້ວ, ຍຸກແຫ່ງອານາຈັກແມ່ນແຕກຕ່າງຈາກເວລາທີ່ຜ່ານມາ. ມັນບໍ່ກ່ຽວກັບການກະທຳຂອງມະນຸດ; ກົງກັນຂ້າມ, ເຮົາໄດ້ລົງມາສູ່ແຜ່ນດິນໂລກ ເພື່ອປະຕິບັດພາລະກິດຂອງເຮົາດ້ວຍຕົວເອງ ເຊິ່ງແມ່ນບາງສິ່ງທີ່ມະນຸດບໍ່ສາມາດເຂົ້າໃຈ ແລະ ບໍ່ສາມາດບັນລຸໄດ້". ແນ່ນອນ ພຣະເຈົ້າຕ້ອງປະຕິບັດພາລະກິດນີ້ດ້ວຍຕົວເອງ. ມະນຸດບໍ່ສາມາດເຮັດພາລະກິດດັ່ງກ່າວນີ້ໄດ້; ພວກເຂົາບໍ່ສາມາດເຮັດມັນໄດ້. ນອກຈາກພຣະເຈົ້າແລ້ວ ມີຜູ້ໃດ ທີ່ສາມາດປະຕິບັດພາລະກິດທີ່ຍິ່ງໃຫຍ່ດັ່ງກ່າວໃນທ່າມກາງມະນຸດບໍ່? ມີຜູ້ໃດທີ່ສາມາດ "ທໍລະມານ" ມະນຸດຊາດທັງໝົດຈົນຕາຍໄປເຄິ່ງໜຶ່ງບໍ່? ມະນຸດສາມາດຈັດຕຽມພາລະກິດດັ່ງກ່າວນັ້ນໄດ້ບໍ? ເປັນຫຍັງພຣະອົງຈຶ່ງເວົ້າວ່າ: "ເຮົາໄດ້ລົງມາສູ່ແຜ່ນດິນໂລກເພື່ອປະຕິບັດພາລະກິດຂອງເຮົາດ້ວຍຕົວເອງ"? ພຣະວິນຍານຂອງພຣະເຈົ້າໄດ້ຫາຍໄປຈາກທຸກພື້ນທີ່ແທ້ບໍ? ປະໂຫຍກທີ່ວ່າ: "ເຮົາໄດ້ລົງມາສູ່ແຜ່ນດິນໂລກ ເພື່ອປະຕິບັດພາລະກິດຂອງເຮົາດ້ວຍຕົວເອງ" ແມ່ນໝາຍເຖິງຄວາມຈິງທີ່ວ່າ ພຣະວິນຍານຂອງພຣະເຈົ້າໄດ້ບັງເກີດເປັນເນື້ອໜັງ ເພື່ອເຮັດພາລະກິດ ແລະ ຄວາມຈິງທີ່ວ່າ ພຣະວິນຍານຂອງພຣະເຈົ້າກຳລັງປະຕິບັດພາລະກິດຢ່າງຊັດເຈນຜ່ານມະນຸດ. ໃນການດຳເນີນພາລະກິດຂອງພຣະອົງດ້ວຍຕົວເອງ, ພຣະອົງໄດ້ອະນຸຍາດໃຫ້ຫຼາຍຄົນເຫັນພຣະອົງດ້ວຍຕາເປົ່າຂອງພວກເຂົາ; ມັນບໍ່ຈຳເປັນສຳລັບພວກເຂົາ ທີ່ຈະຊອກຫາພຣະອົງຢ່າງລະອຽດໃນຈິດໃຈຂອງພວກເຂົາອີກ. ນອກຈາກນັ້ນ, ພຣະອົງຍັງໄດ້ອະນຸຍາດໃຫ້ມະນຸດທຸກຄົນເຫັນການກະທຳພາລະກິດຂອງພຣະວິນຍານດ້ວຍຕາຂອງພວກເຂົາເອງ ໂດຍສະແດງໃຫ້ພວກເຂົາເຫັນວ່າ ມີຄວາມ

ແຕກຕ່າງທີ່ແທ້ຈິງລະຫວ່າງເນື້ອໜັງຂອງມະນຸດ ແລະ ພຣະເຈົ້າ. ໃນເວລາດຽວກັນ, ທົ່ວພື້ນທີ່ທັງໝົດ ແລະ ໂລກຈັກກະວານ, ພຣະວິນຍານຂອງພຣະເຈົ້າແມ່ນກຳລັງປະຕິບັດພາລະກິດ. ປະຊາຊົນທັງໝົດຂອງພຣະເຈົ້າ ທີ່ໄດ້ຮັບແສງສະຫວ່າງ ແມ່ນໄດ້ຍອມຮັບນາມຂອງພຣະເຈົ້າ, ໄດ້ເຫັນວິທີກະທຳພາລະກິດຂອງພຣະວິນຍານຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ຈຶ່ງໄດ້ຄຸ້ນເຄີຍກັບພຣະເຈົ້າທີ່ບັງເກີດເປັນມະນຸດຫຼາຍຂຶ້ນ. ສະນັ້ນ, ມີພຽງຄວາມເປັນພຣະເຈົ້າຂອງພຣະເຈົ້າປະຕິບັດພາລະກິດໂດຍກົງເທົ່ານັ້ນ, ນັ້ນກໍຄື ມີພຽງພຣະວິນຍານຂອງພຣະເຈົ້າສາມາດເຮັດພາລະກິດໂດຍບໍ່ມີການລົບກວນແມ່ນແຕ່ໜ້ອຍດຽວ ມະນຸດຊາດຈຶ່ງຈະສາມາດຄຸ້ນເຄີຍກັບພຣະເຈົ້າທີ່ແທ້ຈິງໄດ້. ນີ້ແມ່ນທາດແທ້ຂອງການສ້າງອານາຈັກ.

ຈັກເທື່ອແລ້ວທີ່ພຣະເຈົ້າໄດ້ບັງເກີດເປັນເນື້ອໜັງ? ສອງສາມເທື່ອໄດ້ບໍ? ເປັນຫຍັງພຣະເຈົ້າຈຶ່ງກ່າວຫຼາຍເທື່ອວ່າ: "ຄັ້ງໜຶ່ງເຮົາເຄີຍລົງມາສູ່ໂລກມະນຸດ ແລະ ໄດ້ມີປະສົບການ ແລະ ໄດ້ສັງເກດເບິ່ງການທົນທຸກຂອງພວກເຂົາ ແຕ່ເຮົາເຮັດເຊັ່ນນັ້ນໂດຍທີ່ບໍ່ໄດ້ເຮັດໃຫ້ຈຸດປະສົງຂອງການບັງເກີດເປັນມະນຸດຂອງເຮົາສຳເລັດ"? ເປັນໄປໄດ້ບໍ ທີ່ພຣະເຈົ້າໄດ້ບັງເກີດເປັນມະນຸດຫຼາຍຄັ້ງ ແຕ່ມະນຸດບໍ່ເຄີຍຮູ້ຈັກແມ່ນແຕ່ຄັ້ງດຽວ? ນັ້ນບໍ່ແມ່ນຄວາມໝາຍຂອງຖ້ອຍຄຳນີ້. ຄັ້ງທຳອິດທີ່ພຣະເຈົ້າໄດ້ບັງເກີດເປັນມະນຸດ, ທີ່ຈິງແລ້ວ ເປົ້າໝາຍຂອງພຣະອົງບໍ່ແມ່ນເພື່ອໃຫ້ມະນຸດຮູ້ຈັກພຣະອົງ; ກົງກັນຂ້າມ, ພຣະອົງປະຕິບັດພາລະກິດຂອງພຣະອົງ ແລະ ຫຼັງຈາກນັ້ນກໍຫາຍໄປໂດຍທີ່ບໍ່ມີໃຜສັງເກດເຫັນ ຫຼື ແມ່ນແຕ່ຈະມີໂອກາດຮູ້ຈັກພຣະອົງເລີຍ. ພຣະອົງບໍ່ໄດ້ອະນຸຍາດໃຫ້ຜູ້ຄົນຮູ້ຈັກພຣະອົງຢ່າງສົມບູນ ແລະ ພຣະອົງບໍ່ໄດ້ມີຄວາມສຳຄັນຕໍ່ການບັງເກີດເປັນມະນຸດຢ່າງສິ້ນເຊີງ; ສະນັ້ນ, ຈຶ່ງບໍ່ສາມາດເວົ້າໄດ້ວ່າ ພຣະອົງໄດ້ບັງເກີດເປັນມະນຸດຢ່າງສົມບູນ. ໃນການບັງເກີດເປັນມະນຸດຄັ້ງທຳອິດ, ພຣະອົງພຽງແຕ່ໃຊ້ຮ່າງກາຍທີ່ເປັນຮູບປະທຳ ທີ່ປາສະຈາກທຳມະຊາດຂອງຄວາມຜິດບາບ ເພື່ອປະຕິບັດພາລະກິດ; ຫຼັງຈາກພາລະກິດສຳເລັດ ກໍບໍ່ມີຄວາມຈຳເປັນທີ່ຈະຕ້ອງກ່າວເຖິງອີກ. ສ່ວນມະນຸດເຫຼົ່ານັ້ນ ທີ່ເຄີຍຖືກພຣະເຈົ້າໃຊ້ຕະຫຼອດຍຸກຕ່າງໆ, ໃນກໍລະນີດັ່ງກ່າວຍິ່ງມີຄຸນຄ່າໜ້ອຍທີ່ຈະເອີ້ນວ່າ "ການບັງເກີດເປັນມະນຸດ". ມີແຕ່ພຣະເຈົ້າທີ່ແທ້ຈິງໃນປັດຈຸບັນເທົ່ານັ້ນ ຜູ້ທີ່ຢູ່ພາຍໃຕ້ການປົກຄຸມຂອງຄວາມເປັນມະນຸດທຳມະດາ ແລະ ຜູ້ທີ່ມີຄວາມເປັນພຣະເຈົ້າຢູ່ພາຍໃນ ແລະ ສົມບູນ ແລະ ຜູ້ທີ່ມີເປົ້າໝາຍໃນການອະນຸຍາດໃຫ້ມະນຸດຊາດຮູ້ຈັກພຣະອົງ ທີ່ສາມາດເອີ້ນຢ່າງສົມບູນວ່າ "ການບັງເກີດເປັນມະນຸດ". ຄວາມໝາຍຂອງການລົງມາສູ່ໂລກນີ້ເປັນຄັ້ງທຳອິດຂອງພຣະເຈົ້າ ຄືພາກສ່ວນໜຶ່ງຂອງຄວາມໝາຍຂອງສິ່ງທີ່ຖືກເອີ້ນວ່າ ການບັງເກີດເປັນມະນຸດໃນປັດຈຸບັນ ແຕ່ການມາໃນຄັ້ງນີ້ບໍ່ໄດ້ມີຄວາມໝາຍຢ່າງຄົບຖ້ວນໃນສິ່ງທີ່ເອີ້ນວ່າ ການບັງເກີດເປັນມະນຸດ ໃນປັດຈຸບັນ. ນີ້ແມ່ນເຫດຜົນທີ່ພຣະເຈົ້າເວົ້າວ່າ: "ບໍ່ໄດ້ເຮັດໃຫ້ຄວາມສຳຄັນຂອງການບັງເກີດເປັນມະນຸດຂອງເຮົາສຳເລັດ". ພຣະທຳທີ່ວ່າ: "ໄດ້ການມີປະສົບກັບ ແລະ ການສັງເກດເບິ່ງການທົນທຸກຂອງມະນຸດ" ແມ່ນໝາຍເຖິງພຣະວິນຍານຂອງພຣະເຈົ້າ ແລະ ການບັງເກີດເປັນມະນຸດທັງສອງຄັ້ງ. ຍ້ອນເຫດຜົນນີ້ ພຣະເຈົ້າຈຶ່ງເວົ້າວ່າ: "ເມື່ອການສ້າງອານາຈັກໄດ້ເລີ່ມດຳເນີນການ, ເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາກໍໄດ້ເລີ່ມປະຕິບັດ

ພັນທະກິດຂອງເຮົາຢ່າງເປັນທາງການ; ນັ້ນກໍຄື ກະສັດຂອງອານາຈັກໄດ້ຖືເອົາອຳນາດສູງສຸດຂອງພຣະອົງຢ່າງເປັນທາງການ". ເຖິງວ່າ ການສ້າງຄຣິສຕະຈັກແມ່ນການເປັນພະຍານໃຫ້ແກ່ນາມຂອງພຣະເຈົ້າ ແຕ່ພາລະກິດຍັງບໍ່ໄດ້ເລີ່ມຢ່າງເປັນທາງການ; ມີແຕ່ໃນປັດຈຸບັນເທົ່ານັ້ນ ຈຶ່ງຈະສາມາດເວົ້າໄດ້ວ່າ ເປັນການສ້າງອານາຈັກ. ສິ່ງດຽວທີ່ຖືກເຮັດກ່ອນໜ້ານັ້ນແມ່ນເປັນພຽງການຊີມລົດຊາດກ່ອນ; ມັນບໍ່ແມ່ນຂອງແທ້. ເຖິງຈະມີການເວົ້າວ່າ ອານາຈັກໄດ້ເລີ່ມຂຶ້ນແລ້ວ ແຕ່ກໍຍັງບໍ່ມີການເຮັດພາລະກິດພາຍໃນມັນເທື່ອ. ມີແຕ່ໃນປັດຈຸບັນເທົ່ານັ້ນ ເມື່ອໄດ້ມີການເຮັດພາລະກິດພາຍໃນຄວາມເປັນພຣະເຈົ້າຂອງພຣະເຈົ້າ ແລະ ພຣະເຈົ້າໄດ້ເລີ່ມພາລະກິດຂອງພຣະອົງຢ່າງເປັນທາງການ, ໃນທີ່ສຸດມະນຸດກໍຈຶ່ງໄດ້ເຂົ້າໄປໃນອານາຈັກ. ສະນັ້ນ: "ການລົງມາຂອງອານາຈັກສູ່ໂລກມະນຸດ ເຊິ່ງບໍ່ແມ່ນແຕ່ເປັນພຽງການສະແດງອອກຕາມຕົວໜັງສືແຕ່ມັນຄືໜຶ່ງໃນບັນດາຄວາມເປັນຈິງທີ່ແທ້ຈິງ; ນີ້ແມ່ນສ່ວນໜຶ່ງຂອງຄວາມໝາຍຂອງ 'ຄວາມເປັນຈິງຂອງການປະຕິບັດ'". ຂໍ້ຄວາມທີ່ຄັດຕອນມານີ້ແມ່ນການສະຫຼຸບໂດຍຫຍໍ້ທີ່ເໝາະສົມກ່ຽວກັບການອະທິບາຍມາຂ້າງເທິງ. ເມື່ອໄດ້ໃຫ້ຄຳອະທິບາຍນີ້ແລ້ວ, ພຣະເຈົ້າກໍໄດ້ສືບຕໍ່ອະທິບາຍສະພາບທົ່ວໄປຂອງມະນຸດ ເຊິ່ງເຮັດໃຫ້ຜູ້ຄົນຢູ່ໃນສະພາບຫຍຸ້ງໆຢູ່ຕະຫຼອດເວລາ. "ທົ່ວໂລກ ທຸກຄົນແມ່ນມີຊີວິດຢູ່ພາຍໃນຄວາມເມດຕາ ແລະ ຄວາມກະລຸນາຂອງເຮົາ ແຕ່ມະນຸດທຸກຄົນກໍຢູ່ພາຍໃຕ້ການພິພາກສາຂອງເຮົາເຊັ່ນກັນ ແລະ ໃນທຳນອງດຽວກັນນັ້ນກໍຢູ່ພາຍໃຕ້ການທົດລອງຂອງເຮົາ". ຊີວິດມະນຸດແມ່ນຖືກຄຸ້ມຄອງຕາມຫຼັກການ ແລະ ກົດລະບຽບໃດໜຶ່ງທີ່ພຣະເຈົ້າໄດ້ຈັດແຈງໄວ້ ແລະ ສິ່ງເຫຼົ່ານັ້ນແມ່ນມີດັ່ງນີ້: ຈະມີເວລາແຫ່ງຄວາມສຸກ, ຊ່ວງເວລາແຫ່ງຄວາມຜິດຫວັງ ແລະ ຍິ່ງໄປກວ່ານັ້ນ ແມ່ນເວລາຂອງການຖືກເຮັດໃຫ້ບໍລິສຸດດ້ວຍຄວາມລຳບາກທີ່ຕ້ອງໄດ້ມີການອົດທົນ. ສະນັ້ນ, ບໍ່ມີຜູ້ໃດຈະດຳລົງຊີວິດແຫ່ງຄວາມສຸກທີ່ບໍລິສຸດ ຫຼື ການທົນທຸກທີ່ບໍລິສຸດ; ທຸກຊີວິດຈະມີການຂຶ້ນ ແລະ ລົງຂອງມັນ. ທົ່ວມະນຸດຊາດທັງໝົດ, ຄວາມເມດຕາ ແລະ ຄວາມກະລຸນາຂອງພຣະເຈົ້າບໍ່ພຽງແຕ່ຊັດເຈນເທົ່ານັ້ນ ແຕ່ການພິພາກສາຂອງພຣະອົງ ແລະ ອຸປະນິໄສທັງໝົດຂອງພຣະອົງກໍເຊັ່ນກັນ. ສາມາດເວົ້າໄດ້ວ່າ ມະນຸດທຸກຄົນມີຊີວິດໃນທ່າມກາງການທົດລອງຂອງພຣະເຈົ້າ, ແມ່ນບໍ? ທົ່ວໂລກທີ່ກວ້າງໃຫຍ່ໄພສານນີ້, ມະນຸດທຸກຄົນແມ່ນຫຍຸ້ງຢູ່ກັບການຊອກຫາທາງອອກສຳລັບຕົວເອງ. ພວກເຂົາບໍ່ແນ່ໃຈວ່າ ພວກເຂົາຈະຫຼິ້ນບົດບາດໃດ ແລະ ບາງຄົນເຖິງກັບທຳລາຍ ຫຼື ຍອມເສຍຊີວິດຂອງພວກເຂົາເພື່ອຊາຕາກຳ. ແມ່ນແຕ່ໂຢບກໍບໍ່ໄດ້ຖືກຍົກເວັ້ນຈາກກົດເກນນີ້: ເຖິງແມ່ນວ່າ ເພິ່ນໄດ້ອົດທົນຕໍ່ການທົດລອງຂອງພຣະເຈົ້າເຊັ່ນກັນ ແຕ່ເຖິງຢ່າງນັ້ນກໍຕາມເພິ່ນກໍຍັງຊອກຫາທາງອອກສຳລັບຕົວເອງ. ບໍ່ມີຜູ້ໃດສາມາດຕັ້ງໝັ້ນຜ່ານການທົດລອງຂອງພຣະເຈົ້າໄດ້. ເນື່ອງຈາກຄວາມໂລບ ແລະ ທຳມະຊາດຂອງມະນຸດ, ບໍ່ມີຜູ້ໃດມີຄວາມພໍໃຈຢ່າງເຕັມປ່ຽມກັບສະພາບປັດຈຸບັນຂອງພວກເຂົາ ແລະ ບໍ່ມີຜູ້ໃດຕັ້ງໝັ້ນຕໍ່ການທົດລອງ; ທຸກຄົນຕົກຢູ່ພາຍໃຕ້ການພິພາກສາຂອງພຣະເຈົ້າ. ຖ້າພຣະເຈົ້າໄດ້ເອົາຈິງເອົາຈັງກັບມະນຸດ ແລະ ຖ້າພຣະອົງຍັງມີຄວາມຮຽກຮ້ອງດັ່ງກ່າວຢ່າງເຂັ້ມງວດຈາກຜູ້ຄົນ ແລ້ວມັນກໍຈະເປັນຄືດັ່ງທີ່ພຣະອົງໄດ້ກ່າວໄວ້ວ່າ: "ເຜົ່າພັນມະນຸດທັງໝົດກໍຈະຕົກຢູ່ພາຍໃຕ້ການຈ້ອງເບິ່ງຢ່າງເຜົາໄໝ້ຂອງເຮົາ".

ເຖິງແມ່ນວ່າໃນຄວາມເປັນຈິງແລ້ວ ການສ້າງອານາຈັກໄດ້ເລີ່ມຂຶ້ນຢ່າງເປັນທາງການ ແຕ່ສຽງຄຳນັບອານາຈັກຍັງບໍ່ໄດ້ດັງຂຶ້ນຢ່າງເປັນທາງການ; ຕອນນີ້ມັນແມ່ນການທຳນາຍສິ່ງທີ່ຈະມາເຖິງ. ເມື່ອທຸກຄົນຖືກເຮັດໃຫ້ສົມບູນ ແລະ ທຸກປະເທດໃນແຜ່ນດິນໂລກໄດ້ກາຍເປັນອານາຈັກຂອງພຣະຄຣິດ, ມັນກໍຈະເປັນເວລາທີ່ສຽງຟ້າຮ້ອງທັງເຈັດດັງກ້ອງວານຂຶ້ນ. ຍຸກປັດຈຸບັນກຳລັງກ້າວໄປສູ່ຂັ້ນຕອນນັ້ນ; ການບຸກໂຈມຕີຖືກບຸກໄປສູ່ຍຸກນັ້ນແລ້ວ. ນີ້ແມ່ນແຜນການຂອງພຣະເຈົ້າ ແລະ ໃນອະນາຄົດອັນໃກ້ນີ້ມັນກໍຈະບັນລຸຜົນ. ຢ່າງໃດກໍຕາມ, ພຣະເຈົ້າແມ່ນໄດ້ເຮັດທຸກຢ່າງທີ່ພຣະອົງໄດ້ກ່າວສຳເລັດໝົດແລ້ວ. ສະນັ້ນ, ມັນຈຶ່ງຊັດເຈນວ່າ ບັນດາປະເທດຕ່າງໆໃນແຜ່ນດິນໂລກແມ່ນຜາສາດໃນດິນຊາຍສັ່ນສະເທືອນເມື່ອນໍ້ານອງໄຫຼເຂົ້າມາໃກ້: ຍຸກສຸດທ້າຍແມ່ນໃກ້ທີ່ຈະມາເຖິງ ແລະ ມັງກອນແດງທີ່ຍິ່ງໃຫຍ່ຈະລົ້ມລົງຢູ່ພາຍໃຕ້ພຣະທຳຂອງພຣະເຈົ້າ. ເພື່ອຮັບປະກັນວ່າ ແຜນການຂອງພຣະອົງຖືກປະຕິບັດໃຫ້ສຳເລັດ, ທູດສະຫວັນແມ່ນໄດ້ລົງມາສູ່ແຜ່ນດິນໂລກ ໂດຍເຮັດສຸດຄວາມສາມາດ ເພື່ອເຮັດໃຫ້ພຣະເຈົ້າພໍໃຈ. ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ຖືກສົ່ງໄປຍັງສະໜາມຮົບ ເພື່ອຕໍ່ສູ້ກັບສັດຕູ. ຢູ່ບ່ອນໃດກໍຕາມທີ່ການບັງເກີດເປັນມະນຸດໄດ້ປາກົດຂຶ້ນ ແມ່ນບ່ອນທີ່ສັດຕູຈະຖືກກຳຈັດ. ປະເທດຈີນຈະເປັນປະເທດທຳອິດທີ່ຖືກທຳລາຍລ້າງ; ມັນຈະຖືກທຳລາຍດ້ວຍມືຂອງພຣະເຈົ້າ. ພຣະເຈົ້າຈະບໍ່ໄວ້ຊີວິດທີ່ຢູ່ບ່ອນນັ້ນຢ່າງເດັດຂາດ. ຫຼັກຖານຂອງການພັງທະລາຍເທື່ອລະເລັກເທື່ອລະໜ້ອຍຂອງມັງກອນແດງທີ່ຍິ່ງໃຫຍ່ ສາມາດເຫັນໄດ້ໃນການເຕີບໃຫຍ່ຢ່າງຕໍ່ເນື່ອງຂອງຜູ້ຄົນ; ນີ້ແມ່ນສິ່ງທີ່ແນ່ນອນ ແລະ ໃຜກໍເຫັນໄດ້. ການເຕີບໃຫຍ່ຂອງຜູ້ຄົນແມ່ນສັນຍານຂອງການຕາຍຂອງສັດຕູ. ນີ້ແມ່ນການອະທິບາຍເລັກນ້ອຍ ກ່ຽວກັບຄວາມໝາຍທີ່ວ່າ "ຕໍ່ສູ້". ສະນັ້ນ, ພຣະເຈົ້າໄດ້ເຕືອນຜູ້ຄົນຫຼາຍຄັ້ງ ເພື່ອເປັນພະຍານຢ່າງງົດງາມແກ່ພຣະອົງ ແລະ ເພື່ອປ່ຽນແປງສະຖານະທີ່ຍຶດຖືດ້ວຍຄວາມຄິດ; ເຊິ່ງເປັນຄວາມຂີ້ຮ້າຍຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ຢູ່ໃນໃຈຂອງມະນຸດ. ພຣະເຈົ້າໃຊ້ຄຳເຕືອນດັ່ງກ່າວ ເພື່ອເຮັດໃຫ້ຄວາມເຊື່ອຂອງຜູ້ຄົນມີຊີວິດຊີວາຂຶ້ນ ແລະ ການເຮັດເຊັ່ນນັ້ນກໍເປັນການບັນລຸຜົນສຳເລັດໃນພາລະກິດຂອງພຣະອົງ. ນີ້ກໍຍ້ອນພຣະເຈົ້າໄດ້ກ່າວໄວ້ວ່າ: "ແມ່ນຫຍັງແທ້ທີ່ມະນຸດສາມາດເຮັດໄດ້? ບໍ່ແມ່ນເຮົາເຮັດມັນດ້ວຍຕົວເຮົາເອງບໍ?" ມະນຸດທຸກຄົນແມ່ນເປັນແບບນີ້; ພວກເຂົາບໍ່ພຽງແຕ່ບໍ່ມີຄວາມສາມາດເທົ່ານັ້ນ ແຕ່ພວກເຂົາຍັງໝົດກຳລັງໃຈ ແລະ ຜິດຫວັງໄດ້ງ່າຍ. ຍ້ອນເຫດຜົນນີ້ ພວກເຂົາຈຶ່ງບໍ່ສາມາດຮູ້ຈັກພຣະເຈົ້າ. ພຣະເຈົ້າບໍ່ພຽງແຕ່ຟື້ນຟູຄວາມເຊື່ອຂອງມະນຸດ; ພຣະອົງຍັງເຮັດໃຫ້ຜູ້ຄົນເຕັມໄປດ້ວຍກຳລັງຢ່າງລັບໆ ແລະ ຢ່າງສະໝໍ່າສະເໝີ.

ຕໍ່ໄປ ພຣະເຈົ້າໄດ້ເລີ່ມເວົ້າກັບຈັກກະວານທັງໝົດ. ພຣະເຈົ້າບໍ່ພຽງແຕ່ເລີ່ມພາລະກິດໃໝ່ຂອງພຣະອົງໃນປະເທດຈີນເທົ່ານັ້ນ ແຕ່ພຣະອົງຍັງໄດ້ເລີ່ມເຮັດພາລະກິດໃໝ່ຂອງປັດຈຸບັນທົ່ວຈັກກະວານອີກດ້ວຍ. ໃນຂັ້ນຕອນນີ້ຂອງພາລະກິດ, ຍ້ອນພຣະເຈົ້າປາດຖະໜາທີ່ຈະເປີດເຜີຍການກະທຳທັງໝົດຂອງພຣະອົງທົ່ວໂລກ ເພື່ອວ່າ ມະນຸດທຸກຄົນທີ່ໄດ້ທໍລະຍົດຕໍ່ພຣະອົງຈະກັບມາອີກຄັ້ງ ເພື່ອອ່ອນນ້ອມຢູ່ຕໍ່ໜ້າບັນລັງຂອງພຣະອົງ, ການພິພາກສາຂອງພຣະອົງຈຶ່ງຈະຍັງມີຄວາມເມດຕາ ແລະ ຄວາມກະລຸນາຂອງພຣະອົງ. ພຣະເຈົ້າໃຊ້ເຫດການໃນປັດຈຸບັນທົ່ວໂລກເປັນໂອກາດ ເພື່ອເຮັດໃຫ້ມະນຸດ

ຮູ້ສຶກຕື່ນຕົກໃຈ ແລະ ດົນບັນດານໃຫ້ພວກເຂົາສະແຫວງຫາພຣະເຈົ້າ ເພື່ອວ່າ ພວກເຂົາອາດຫຼັ່ງໄຫຼກັບຄືນມາຢູ່ຕໍ່ໜ້າພຣະອົງ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ: "ນີ້ແມ່ນໜຶ່ງໃນວິທີທີ່ເຮົາເຮັດພາລະກິດ ແລະ ແມ່ນການກະທຳເພື່ອຊ່ວຍມະນຸດໃຫ້ລອດພົ້ນຢ່າງບໍ່ຕ້ອງສົງໄສ ແລະ ສິ່ງທີ່ເຮົາຍື່ນໃຫ້ພວກເຂົາຍັງແມ່ນຄວາມຮັກຊະນິດໜຶ່ງອີກດ້ວຍ". ໃນນີ້ ພຣະເຈົ້າໄດ້ເປີດເຜີຍທຳມະຊາດທີ່ແທ້ຈິງຂອງມະນຸດດ້ວຍຄວາມຖືກຕ້ອງ ທີ່ແຊກຊຶມເຂົ້າໄປ, ບໍ່ມີສິ່ງເທົ່າທຽມ ແລະ ໂດຍທີ່ບໍ່ຕ້ອງໃຊ້ຄວາມພະຍາຍາມ. ສິ່ງນີ້ເຮັດໃຫ້ຜູ້ຄົນເຊື່ອງໃບໜ້າຂອງພວກເຂົາດ້ວຍຄວາມອັບອາຍ ແລະ ຖືກເຮັດໃຫ້ອັບອາຍຢ່າງທີ່ສຸດ. ທຸກຄັ້ງທີ່ພຣະເຈົ້າເວົ້າ, ບໍ່ວ່າດ້ວຍວິທີໃດ ພຣະອົງສາມາດຊີ້ໃຫ້ເຫັນຕະຫຼອດເຖິງບາງພາກສ່ວນຂອງການປະຕິບັດທີ່ເປັນຕາອັບອາຍຂອງມະນຸດ ເພື່ອວ່າ ໃນຂະນະທີ່ຢູ່ຢ່າງສະບາຍ ຜູ້ຄົນຈະບໍ່ລືມທີ່ຈະຮູ້ຈັກຕົວເອງ ແລະ ບໍ່ຄິດກ່ຽວກັບການຮູ້ຈັກຕົວເອງວ່າ ເປັນວຽກງານເກົ່າ. ຕາມທຳມະຊາດຂອງມະນຸດແລ້ວ, ຖ້າພຣະເຈົ້າຢຸດທີ່ຈະຊີ້ໃຫ້ເຫັນເຖິງຂໍ້ບົກຜ່ອງຂອງພວກເຂົາແມ່ນແຕ່ຊົ່ວໄລຍະໜຶ່ງພວກເຂົາກໍຈະກາຍເປັນຄົນໄຮ້ສິນທຳ ແລະ ອວດດີ. ນີ້ແມ່ນເຫດຜົນທີ່ພຣະເຈົ້າເວົ້າໃນປັດຈຸບັນອີກຄັ້ງວ່າ: "ມະນຸດບໍ່ຮູ້ຄຸນຄ່າຕຳແໜ່ງທີ່ເຮົາໄດ້ມອບໃຫ້ພວກເຂົາ, ສະນັ້ນ ຫຼາຍຄົນໃນຕຳແໜ່ງ 'ຜູ້ເຮັດການບໍລິການ' ຈຶ່ງມີຄວາມບໍ່ພໍໃຈໃນໃຈຂອງພວກເຂົາ ແລະ ຫຼາຍຄົນໃນຕຳແໜ່ງ 'ປະຊາຊົນຂອງເຮົາ' ຈຶ່ງມີຄວາມຮັກຕໍ່ເຮົາໃນໃຈຂອງພວກເຂົາ. ບໍ່ມີຜູ້ໃດຄວນພະຍາຍາມຫຼອກລວງເຮົາ; ຕາຂອງເຮົາແມ່ນເຫັນທຸກຢ່າງ!" ທັນໃດທີ່ມະນຸດໄດ້ອ່ານຖ້ອຍຄຳນີ້, ພວກເຂົາກໍຮູ້ສຶກອຶດອັດໃຈທັນທີ. ພວກເຂົາຮູ້ສຶກວ່າ ການກະທຳໃນອະດີດຂອງພວກເຂົາແມ່ນຄືເດັກນ້ອຍຫຼາຍ. ມັນເປັນພຽງການກະທຳສົກກະປົກທີ່ລ່ວງເກີນພຣະເຈົ້າ. ບໍ່ດົນມານີ້ ພວກເຂົາຕ້ອງການເຮັດໃຫ້ພຣະເຈົ້າພໍໃຈແຕ່ໃນຂະນະທີ່ພວກເຂົາເຕັມໃຈເຮັດ ພວກເຂົາກໍຂາດພະລັງທີ່ຈະເຮັດເຊັ່ນນັ້ນ ແລະ ບໍ່ຮູ້ຈັກສິ່ງທີ່ພວກເຂົາຄວນເຮັດ. ພວກເຂົາແມ່ນເຕັມໄປດ້ວຍຄວາມຕັ້ງໃຈໃໝ່ໂດຍບໍ່ຮູ້ຕົວ. ນີ້ແມ່ນຜົນຈາກການອ່ານພຣະທຳເຫຼົ່ານີ້ຫຼັງຈາກທີ່ມີຄວາມສະຫງົບໃຈ.

ໃນດ້ານໜຶ່ງ, ພຣະເຈົ້າເວົ້າວ່າ ຊາຕານແມ່ນເປັນບ້າຫຼາຍ ໃນຂະນະອີກດ້ານ ພຣະອົງໄດ້ຊີ້ໃຫ້ເຫັນວ່າ ທຳມະຊາດເດີມໆທີ່ມະນຸດສ່ວນໃຫຍ່ມີ ແມ່ນບໍ່ໄດ້ຖືກປ່ຽນແປງເລີຍ. ຈາກສິ່ງນີ້, ມັນຈຶ່ງຊັດເຈນວ່າ ການກະທຳຂອງຊາຕານແມ່ນສະແດງອອກຜ່ານຄວາມເປັນມະນຸດ. ດັ່ງນັ້ນ, ພຣະເຈົ້າຈຶ່ງເຕືອນມະນຸດເປັນປະຈຳວ່າ ບໍ່ໃຫ້ເສເພ ຍ້ອນຢ້ານພວກເຂົາຖືກຊາຕານກືນກິນ. ນີ້ບໍ່ແມ່ນພຽງການທຳນາຍເທົ່ານັ້ນວ່າ ມະນຸດບາງຄົນຈະກະບົດ; ຍິ່ງໄປກວ່ານັ້ນ, ມັນຍັງແມ່ນສຽງກະດິງສັນຍານທີ່ສົ່ງສຽງເຕືອນໃຫ້ທຸກຄົນປະຖິ້ມອະດີດຢ່າງຮີບດ່ວນ ແລະ ສະແຫວງຫາຍຸກປັດຈຸບັນ. ບໍ່ມີຜູ້ໃດປາດຖະໜາທີ່ຈະຖືກພວກຜີສາດຄອບງຳ ຫຼື ຖືກວິນຍານຊົ່ວຮ້າຍເອົາຊະນະ, ສະນັ້ນ ພຣະທຳຂອງພຣະເຈົ້າຍິ່ງແມ່ນຄຳເຕືອນ ແລະ ການຕັກເຕືອນພວກເຂົາ. ຢ່າງໃດກໍຕາມ, ເມື່ອຄົນສ່ວນໃຫຍ່ຍ້າຍໄປຢູ່ທາງກົງກັນຂ້າມຫຼາຍ, ໂດຍເອົາຄວາມສຳຄັນຫຼາຍຢ່າງມາຕິດພັນກັບພຣະທຳທຸກຂໍ້ຂອງພຣະເຈົ້າ, ພຣະເຈົ້າຈຶ່ງໄດ້ເວົ້າຕາມລຳດັບວ່າ: "ຄົນສ່ວນໃຫຍ່ແມ່ນລໍຖ້າໃຫ້ເຮົາເປີດເຜີຍຄວາມລຶກລັບຍິ່ງຂຶ້ນ ເພື່ອພວກເຂົາຈະໄດ້ລ້ຽງສາຍຕາຂອງພວກເຂົາ. ຢ່າງໃດກໍຕາມ, ເຖິງວ່າ ເຈົ້າຈະເຂົ້າໃຈຄວາມ

ລຶກລັບທັງໝົດຂອງສະຫວັນ ແຕ່ເຈົ້າຈະສາມາດເຮັດຫຍັງໄດ້ດ້ວຍຄວາມຮູ້ນັ້ນ? ມັນຈະເພີ່ມຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາບໍ? ມັນຈະປຸກຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາບໍ?" ຈາກສິ່ງນີ້ ມັນກໍຊັດເຈນແລ້ວວ່າ ມະນຸດບໍ່ໄດ້ໃຊ້ພຣະທຳຂອງພຣະເຈົ້າ ເພື່ອຮູ້ຈັກພຣະເຈົ້າ ແລະ ຮັກພຣະເຈົ້າ ແຕ່ກົງກັນຂ້າມ ແມ່ນເພື່ອເພີ່ມຮ້ານຄ້າຂອງ "ສາງນ້ອຍໆ" ຂອງພວກເຂົາ. ສະນັ້ນ, ພຣະເຈົ້າຈຶ່ງໃຊ້ວະລີທີ່ວ່າ: "ລ້ຽງສາຍຕາຂອງພວກເຂົາ" ເພື່ອອະທິບາຍເຖິງຄວາມຮຸນແຮງຂອງມະນຸດ ເຊິ່ງສະທ້ອນໃຫ້ເຫັນວ່າ ຄວາມຮັກຂອງມະນຸດທີ່ມີຕໍ່ພຣະເຈົ້າຍັງບໍ່ບໍລິສຸດເທື່ອ. ຖ້າພຣະເຈົ້າບໍ່ເປີດເຜີຍຄວາມລຶກລັບ, ມະນຸດຈະບໍ່ໃຫ້ຄວາມສຳຄັນຫຼາຍປານໃດກັບພຣະທຳຂອງພຣະອົງ ແຕ່ຈະເສືອດຕາເບິ່ງພວກມັນແບບເຜີນໆ ໂດຍເບິ່ງໜ້ອຍໜຶ່ງ ຄືກັບວ່າ ກຳລັງຊື່ນຊົມດອກໄມ້ໃນຂະນະທີ່ຂີ່ມ້າຜ່ານໄປ. ພວກເຂົາຈະບໍ່ໃຊ້ເວລາເພື່ອສະທ້ອນເບິ່ງ ຫຼື ພິຈາລະນາພຣະວັດຈະນະຂອງພຣະເຈົ້າຢ່າງແທ້ຈິງ. ຄົນສ່ວນໃຫຍ່ບໍ່ຖະໜອມພຣະທຳຂອງພຣະເຈົ້າຢ່າງແທ້ຈິງ. ພວກເຂົາບໍ່ພະຍາຍາມຫຼາຍໃນການກິນ ແລະ ດື່ມພຣະທຳຂອງພຣະອົງ; ກົງກັນຂ້າມ, ພວກເຂົາພຽງແຕ່ອ່ານພຣະທຳເຫຼົ່ານັ້ນແບບພໍເປັນພິທີ. ເປັນຫຍັງຕອນນີ້ພຣະເຈົ້າຈຶ່ງເວົ້າຕ່າງຈາກອະດີດ? ເປັນຫຍັງພຣະທຳທັງໝົດຂອງພຣະອົງຈຶ່ງບໍ່ສາມາດຢັ່ງເຖິງໄດ້? ບາງຕົວຢ່າງຂອງພຣະທຳ ເຊັ່ນວ່າ: "ສວມ" ໃນປະໂຫຍກ: "ເຮົາກໍຈະບໍ່ມີວັນສວມເຄື່ອງໝາຍດັ່ງກ່າວໃຫ້ພວກເຂົາຢ່າງງ່າຍດາຍ", "ກ້ອນຄຳທີ່ບໍລິສຸດທີ່ສຸດ" ໃນປະໂຫຍກ: "ມີຜູ້ໃດ ທີ່ສາມາດຮັບກ້ອນຄຳທີ່ບໍລິສຸດທີ່ສຸດ ທີ່ສ້າງພຣະທຳຂອງເຮົາບໍ່", ການທີ່ພຣະອົງໄດ້ກ່າວກ່ອນໜ້ານັ້ນວ່າ: "ການດຳເນີນການ" ໃນປະໂຫຍກ: "ໂດຍບໍ່ໄດ້ຜ່ານການດຳເນີນການໃດໆໂດຍຊາຕານ" ແລະ ວະລີອື່ນໆ. ມະນຸດບໍ່ເຂົ້າໃຈວ່າ ເປັນຫຍັງພຣະເຈົ້າຈຶ່ງເວົ້າແບບນີ້; ພວກເຂົາບໍ່ສາມາດເຂົ້າໃຈວ່າ ເປັນຫຍັງພຣະອົງຈຶ່ງເວົ້າແບບຊວນຫົວ, ຕະຫຼົກ ແລະ ຢົ້ວຢວນ. ມັນແມ່ນສິ່ງເຫຼົ່ານີ້ ທີ່ສະແດງເຖິງຈຸດປະສົງຂອງຖ້ອຍຄຳຂອງພຣະເຈົ້າ. ນັບແຕ່ຕອນເລີ່ມຕົ້ນ, ມະນຸດບໍ່ສາມາດເຂົ້າໃຈພຣະທຳຂອງພຣະເຈົ້າມາຕະຫຼອດ ແລະ ເບິ່ງຄືວ່າ ພຣະວັດຈະນະຂອງພຣະອົງຂ້ອນຂ້າງຈະເຄັ່ງຂຶມ ແລະ ເຄັ່ງຄັດ. ໃນການເພີ່ມສຳນວນຕະຫຼົກໜ້ອຍໜຶ່ງ ກໍຄືການເພີ່ມຄຳເວົ້າຕະຫຼົກໜ້ອຍໜຶ່ງຢູ່ບ່ອນນີ້ ແລະ ບ່ອນນັ້ນ, ພຣະອົງກໍສາມາດເຮັດໃຫ້ອາລົມຜ່ອນຄາຍລົງດ້ວຍພຣະທຳຂອງພຣະອົງ ແລະ ອະນຸຍາດໃຫ້ມະນຸດພັກຜ່ອນກ້າມຊີ້ນຂອງພວກເຂົາໜ້ອຍໜຶ່ງ. ໃນການເຮັດເຊັ່ນນັ້ນ, ພຣະອົງສາມາດບັນລຸຜົນຍິ່ງຂຶ້ນ ໂດຍບັງຄັບໃຫ້ມະນຸດທຸກຄົນຄຳນຶງເຖິງພຣະທຳຂອງພຣະເຈົ້າ.

# ບົດທີ 11

ໃນສາຍຕາເປົ່າຂອງມະນຸດ, ເບິ່ງຄືວ່າ ບໍ່ມີການປ່ຽນແປງໃນພຣະວັດຈະນະຂອງພຣະເຈົ້າໃນຊ່ວງໄລຍະນີ້ ເຊິ່ງນັ້ນກໍຍ້ອນວ່າ ຜູ້ຄົນບໍ່ສາມາດເຂົ້າໃຈກົດເກນທີ່ພຣະເຈົ້າກ່າວ ແລະ ບໍ່ເຂົ້າໃຈເນື້ອຫາໃນພຣະທຳຂອງພຣະອົງ. ພາຍຫຼັງໄດ້ອ່ານພຣະທຳຂອງພຣະເຈົ້າ, ຜູ້ຄົນບໍ່ເຊື່ອວ່າ ຈະມີສິ່ງລຶກລັບໃໝ່ໃນພຣະທຳເຫຼົ່ານີ້; ດ້ວຍເຫດນັ້ນ, ພວກເຂົາຈຶ່ງບໍ່ສາມາດນຳພາຊີວິດທີ່ເປັນຊີວິດໃໝ່ຢ່າງພິເສດ ແລະ ໃນທາງກົງກັນຂ້າມ ດຳລົງຊີວິດທີ່ບໍ່ມີການເຄື່ອນໄຫວ ແລະ ບໍ່ມີຊີວິດຊີວາ. ແຕ່ໃນພຣະວັດຈະນະຂອງພຣະເຈົ້າ, ພວກເຮົາເຫັນວ່າ ມີຄວາມໝາຍທີ່ເລິກເຊິ່ງທີ່ມະນຸດບໍ່ສາມາດຢັ່ງເຖິງ ແລະ ເອື້ອມເຖິງໄດ້. ໃນປັດຈຸບັນ, ການທີ່ມະນຸດໂຊກດີຫຼາຍທີ່ໄດ້ອ່ານພຣະທຳດັ່ງກ່າວຂອງພຣະເຈົ້າແມ່ນເປັນພອນທີ່ຍິ່ງໃຫຍ່ທີ່ສຸດ. ຖ້າບໍ່ມີໃຜອ່ານພຣະທຳເຫຼົ່ານີ້, ມະນຸດຈະຍັງອວດດີ, ຄິດວ່າຕົວເອງເປັນຝ່າຍຖືກ, ບໍ່ຮູ້ຈັກຕົວເອງຕະຫຼອດ ແລະ ບໍ່ຮູ້ວ່າ ຕົນໄດ້ລົ້ມເຫຼວຫຼາຍສໍ່າໃດແລ້ວ. ຫຼັງຈາກໄດ້ອ່ານພຣະທຳຂອງພຣະເຈົ້າ ທີ່ມີຄວາມໝາຍເລິກເຊິ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້, ຜູ້ຄົນຈຶ່ງເຫຼື້ອມໃສພຣະທຳເຫຼົ່ານັ້ນຢ່າງລັບໆ ແລະ ມີຄວາມເຊື່ອໝັ້ນທີ່ແທ້ຈິງໃນໃຈຂອງພວກເຂົາ ໂດຍປາສະຈາກຄວາມເຊື່ອທີ່ບໍ່ຈິງ; ຫົວໃຈຂອງພວກເຂົາໄດ້ກາຍເປັນຂອງແທ້ ໂດຍທີ່ບໍ່ແມ່ນສິນຄ້າປອມ. ນີ້ແມ່ນສິ່ງທີ່ເກີດຂຶ້ນໃນໃຈຂອງຜູ້ຄົນໂດຍແທ້ຈິງ. ທຸກຄົນມີເລື່ອງຂອງຕົວເອງໃນໃຈຂອງພວກເຂົາ. ມັນເປັນຄືກັບວ່າ ພວກເຂົາກຳລັງເວົ້າກັບຕົວເອງວ່າ: ເປັນໄປໄດ້ສູງທີ່ວ່າ ພຣະເຈົ້າໄດ້ກ່າວເລື່ອງນີ້ເອງ. ຖ້າບໍ່ແມ່ນພຣະເຈົ້າ ແລ້ວແມ່ນໃຜທີ່ຈະສາມາດກ່າວພຣະທຳດັ່ງກ່າວ? ເປັນຫຍັງເຮົາຈຶ່ງເວົ້າສິ່ງເຫຼົ່ານັ້ນບໍ່ໄດ້? ເປັນຫຍັງຈຶ່ງບໍ່ສາມາດເຮັດພາລະກິດດັ່ງກ່າວ? ເບິ່ງຄືວ່າ ພຣະເຈົ້າຜູ້ບັງເກີດເປັນມະນຸດ ທີ່ພຣະເຈົ້າກ່າວເຖິງຢ່າງແທ້ຈິງແມ່ນພຣະເຈົ້າແທ້ ແລະ ແມ່ນພຣະອົງເອງ! ເຮົາຈະບໍ່ສົງໄສອີກແລ້ວ. ບໍ່ສະນັ້ນ, ມັນກໍອາດຈະເປັນໄປໄດ້ ເມື່ອມືຂອງພຣະເຈົ້າມາເຖິງ ມັນກໍຈະຊ້າເກີນໄປທີ່ຈະເສຍໃຈ! ... ນີ້ແມ່ນສິ່ງທີ່ຄົນສ່ວນໃຫຍ່ຄິດໃນໃຈຂອງພວກເຂົາ. ມັນຍຸຕິທຳທີ່ຈະເວົ້າວ່າ ນັບແຕ່ເວລາທີ່ພຣະເຈົ້າເລີ່ມກ່າວຈົນຮອດປັດຈຸບັນ ທຸກຄົນຈະຕໍ່າຕ້ອຍລົງໂດຍທີ່ບໍ່ມີການສະໜັບສະໜູນຈາກພຣະທຳຂອງພຣະເຈົ້າ. ເປັນຫຍັງຈຶ່ງເວົ້າວ່າ ພາລະກິດນີ້ແມ່ນເຮັດໂດຍພຣະເຈົ້າເອງ ແລະ ບໍ່ແມ່ນໂດຍມະນຸດ? ຖ້າພຣະເຈົ້າບໍ່ໄດ້ໃຊ້ພຣະທຳເພື່ອສະໜັບສະໜູນຊີວິດຂອງຄຣິສຕະຈັກ ທຸກຄົນກໍຈະຫາຍໄປໂດຍບໍ່ມີຮ່ອງຮອຍ. ນີ້ບໍ່ແມ່ນອຳນາດຂອງພຣະເຈົ້າບໍ? ນີ້ແມ່ນການໂອ້ອວດແທ້ຈິງຂອງມະນຸດບໍ? ນີ້ແມ່ນທັກສະດຽວຂອງມະນຸດບໍ? ບໍ່ແມ່ນແນ່ນອນ! ຖ້າບໍ່ມີການວິເຄາະຢ່າງລະອຽດ ກໍບໍ່ມີໃຜຮູ້ວ່າ ເລືອດຊະນິດໃດທີ່ໄຫຼໃນເສັ້ນເລືອດຂອງພວກເຂົາ, ພວກເຂົາຈະບໍ່ຮູ້ວ່າ ພວກເຂົາມີຫົວໃຈຈັກດວງ ຫຼື ມີສະໝອງຈັກໜ່ວຍ ແລະ ພວກເຂົາທຸກຄົນຈະຄິດວ່າ ຕົວເອງຮູ້ຈັກພຣະເຈົ້າດີ. ພວກເຂົາບໍ່ຮູ້ບໍວ່າ ຄວາມຮູ້ຂອງພວກເຂົາຍັງຄັດກັນຢູ່? ມີໜ້ອຍຄົນທີ່ແປກໃຈກັບພຣະທຳທີ່ພຣະເຈົ້າກ່າວວ່າ "ທຸກຄົນໃນມະນຸດຊາດຄວນຍອມຮັບການກວດສອບຢ່າງຖີ່ຖ້ວນໂດຍພຣະວິນຍານຂອງເຮົາ, ຄວນກວດກາທຸກຄຳເວົ້າ ແລະການກະທຳຂອງພວກເຂົາຢ່າງໃກ້ຊິດ ແລະ ຍິ່ງໄປກວ່ານັ້ນ ກໍຄວນເບິ່ງການກະທຳທີ່ມະຫັດສະຈັນ

ຂອງເຮົາ". ຈາກສິ່ງນີ້ຈຶ່ງສາມາດເຫັນໄດ້ວ່າ ພຣະທຳຂອງພຣະເຈົ້າບໍ່ແມ່ນຈະບໍ່ມີເປົ້າໝາຍ ແລະ ປາສະຈາກພື້ນຖານ. ພຣະເຈົ້າບໍ່ເຄີຍປະຕິບັດຕໍ່ມະນຸດຢ່າງບໍ່ຍຸຕິທຳ; ແມ່ນແຕ່ໂຢບ ພ້ອມກັບຄວາມເຊື່ອທັງໝົດຂອງລາວ ກໍຍັງບໍ່ໄດ້ຖືກຍົກເວັ້ນ. ລາວຍັງຖືກກວດສອບຢ່າງລະອຽດ ແລະ ບໍ່ມີບ່ອນໃດໃຫ້ລາວລີ້ຈາກຄວາມອັບອາຍຂອງລາວໄດ້. ນັ້ນຍັງບໍ່ໄດ້ເວົ້າເຖິງຜູ້ຄົນໃນປັດຈຸບັນເທື່ອ. ດ້ວຍເຫດນັ້ນ, ຕໍ່ມາ ພຣະເຈົ້າຈຶ່ງຖາມທັນທີວ່າ: "ພວກເຈົ້າຮູ້ສຶກແນວໃດ ໃນເວລາທີ່ອານາຈັກມາຮອດແຜ່ນດິນໂລກ?" ຄຳຖາມຂອງພຣະເຈົ້າມີຄວາມສຳຄັນໜ້ອຍ ແຕ່ມັນເຮັດໃຫ້ຜູ້ຄົນງຶງ: "ພວກເຮົາຮູ້ສຶກແນວໃດ? ພວກເຮົາຍັງບໍ່ຮູ້ວ່າ ອານາຈັກຈະມາຮອດຍາມໃດ ແລ້ວພວກເຮົາຈະເວົ້າກ່ຽວກັບຄວາມຮູ້ສຶກໄດ້ແນວໃດ? ຍິ່ງໄປກວ່ານັ້ນ, ພວກເຮົາບໍ່ຮູ້ຫຍັງເລີຍ. ຖ້າເຮົາຕ້ອງຮູ້ສຶກບາງຢ່າງ, ມັນກໍຈະແມ່ນ 'ຄວາມປະຫຼາດໃຈ' ແລະ ບໍ່ແມ່ນແນວອື່ນ". ທີ່ຈິງແລ້ວ, ຄຳຖາມນີ້ບໍ່ແມ່ນຈຸດປະສົງຂອງພຣະທຳຂອງພຣະເຈົ້າ. ສຳຄັນທີ່ສຸດ, ປະໂຫຍກດຽວນີ້ທີ່ວ່າ "ເມື່ອພຣະບຸດ ແລະ ປະຊາຊົນຂອງເຮົາຫຼັ່ງໄຫຼໄປຍັງບັນລັງຂອງເຮົາ, ເຮົາຈະເລີ່ມການພິພາກສາຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່ຢ່າງເປັນທາງການ", ສະຫຼຸບການພັດທະນາໂລກວິນຍານທັງໝົດ. ບໍ່ມີໃຜຮູ້ສິ່ງທີ່ພຣະເຈົ້າຕ້ອງການເຮັດໃນໂລກວິນຍານໃນໄລຍະນີ້ ແລະ ພາຍຫຼັງທີ່ພຣະເຈົ້າໄດ້ກ່າວພຣະທຳເຫຼົ່ານີ້ເທົ່ານັ້ນ ຜູ້ຄົນຈຶ່ງຕື່ນຂຶ້ນໜ້ອຍໜຶ່ງ. ຍ້ອນມີຂັ້ນຕອນໃນການເຮັດພາລະກິດຂອງພຣະເຈົ້າທີ່ແຕກຕ່າງກັນ ພາລະກິດຂອງພຣະເຈົ້າໃນທົ່ວຈັກກະວານຈຶ່ງມີຄວາມຫຼາກຫຼາຍເຊັ່ນກັນ. ໃນໄລຍະນີ້, ພຣະເຈົ້າຊ່ວຍພຣະບຸດ ແລະ ປະຊາຊົນຂອງພຣະເຈົ້າຫຼາຍທີ່ສຸດ ເຊິ່ງໝາຍຄວາມວ່າ ໂດຍການລ້ຽງດູຂອງທູດສະຫວັນ, ພຣະບຸດ ແລະ ປະຊາຊົນຂອງພຣະເຈົ້າໄດ້ເລີ່ມຍອມຮັບການຖືກຈັດການ ແລະ ຖືກເຮັດໃຫ້ແຕກຫັກ, ພວກເຂົາເລີ່ມກຳຈັດຄວາມຄິດ ແລະ ແນວຄິດຂອງພວກເຂົາຢ່າງເປັນທາງການ ແລະ ເພື່ອກ່າວອຳລາຮ່ອງຮອຍຂອງໂລກແຫ່ງນີ້; ເວົ້າອີກຢ່າງໜຶ່ງກໍຄື "ການພິພາກສາຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່" ທີ່ກ່າວໂດຍພຣະເຈົ້າແມ່ນໄດ້ເລີ່ມຂຶ້ນຢ່າງເປັນທາງການແລ້ວ. ເພາະວ່າ ມັນແມ່ນການພິພາກສາຂອງພຣະເຈົ້າ, ພຣະເຈົ້າຈຶ່ງຕ້ອງກ່າວດ້ວຍສຽງຂອງພຣະອົງ ແລະ ເຖິງແມ່ນວ່າ ເນື້ອຫາຈະຫຼາກຫຼາຍອອກໄປ ແຕ່ເປົ້າໝາຍກໍຍັງຄືເກົ່າສະເໝີ. ອີງຕາມນ້ຳສຽງຈາກການກ່າວຂອງພຣະເຈົ້າ, ເບິ່ງຄືວ່າ ໃນປັດຈຸບັນພຣະທຳຂອງພຣະອົງແມ່ນແນໃສ່ບາງກຸ່ມຄົນເທົ່ານັ້ນ. ທີ່ຈິງແລ້ວ ສຳຄັນທີ່ສຸດກໍຄື ພຣະທຳເຫຼົ່ານີ້ແມ່ນກ່າວເຖິງທຳມະຊາດຂອງມະນຸດທັງໝົດ. ພຣະທຳເຫຼົ່ານີ້ເຈາະເຂົ້າກະດູກສັນຫຼັງຂອງມະນຸດໂດຍກົງ, ບໍ່ລະເວັ້ນຄວາມຮູ້ສຶກຂອງມະນຸດ ແລະ ເປີດເຜີຍທາດແທ້ທັງໝົດຂອງເຂົາ ໂດຍບໍ່ມີການຍົກເວັ້ນ ແລະ ບໍ່ໃຫ້ສິ່ງໃດຜ່ານພົ້ນໄປໄດ້. ເລີ່ມແຕ່ປັດຈຸບັນ ພຣະເຈົ້າແມ່ນເປີດເຜີຍໂສມໜ້າທີ່ແທ້ຈິງຂອງມະນຸດຢ່າງເປັນທາງການ ແລະ ດ້ວຍເຫດນັ້ນ "ເປັ່ງສຽງຂອງພຣະວິນຍານຂອງເຮົາໄປທົ່ວຈັກກະວານ". ຜົນທີ່ໄດ້ຮັບ ໃນທີ່ສຸດກໍຄືສິ່ງນີ້: "ຜ່ານພຣະທຳຂອງເຮົາ, ເຮົາຈະຊຳລະລ້າງທຸກຄົນ ແລະ ທຸກສິ່ງທັງມວນທີ່ຢູ່ໃນສະຫວັນ ແລະ ແຜ່ນດິນໂລກ ເພື່ອວ່າ ດິນແດນຈະບໍ່ສົກກະປົກ ແລະ ຂາດສິນທຳອີກຕໍ່ໄປ ແຕ່ເປັນອານາຈັກບໍລິສຸດ". ພຣະທຳເຫຼົ່ານີ້ສະແດງເຖິງອານາຈັກໃນອະນາຄົດ ເຊິ່ງເປັນອານາຈັກຂອງພຣະຄຣິດທັງໝົດ ດັ່ງທີ່ພຣະເຈົ້າໄດ້ກ່າວວ່າ "ທຸກຄົນແມ່ນໝາກໄມ້ທີ່ດີ, ທຸກຄົນແມ່ນ

ຊາວນາທີ່ດຸໝັ່ນ". ໂດຍທຳມະຊາດແລ້ວ, ສິ່ງນີ້ຈະເກີດຂຶ້ນທົ່ວຈັກກະວານ ແລະ ຈະບໍ່ໄດ້ຖືກຈຳກັດພຽງແຕ່ໃນປະເທດຈີນ.

ເມື່ອພຣະເຈົ້າເລີ່ມກ່າວ ແລະ ປະຕິບັດເທົ່ານັ້ນ ຜູ້ຄົນຈຶ່ງມີຄວາມຮູ້ໜ້ອຍໜຶ່ງກ່ຽວກັບພຣະອົງໃນແນວຄິດຂອງພວກເຂົາ. ໃນເບື້ອງຕົ້ນນັ້ນ ຄວາມຮູ້ດັ່ງກ່າວນີ້ມີຢູ່ໃນແນວຄິດຂອງພວກເຂົາເທົ່ານັ້ນ ແຕ່ເມື່ອເວລາຜ່ານໄປ ຄວາມຄິດຂອງຜູ້ຄົນກໍບໍ່ມີປະໂຫຍດ ແລະ ບໍ່ເໝາະສົມໃຊ້ສຳລັບມະນຸດຍິ່ງຂຶ້ນ; ສະນັ້ນ ພວກເຂົາຈຶ່ງເຊື່ອທຸກສິ່ງທີ່ພຣະເຈົ້າເວົ້າ ຈົນເຖິງຂັ້ນທີ່ວ່າ ພວກເຂົາ "ສ້າງບ່ອນສຳລັບພຣະເຈົ້າທີ່ແທ້ຈິງໃນຈິດສຳນຶກຂອງພວກເຂົາ". ຜູ້ຄົນມີບ່ອນສຳລັບພຣະເຈົ້າທີ່ແທ້ຈິງໃນຈິດສຳນຶກຂອງພວກເຂົາເທົ່ານັ້ນ. ຢ່າງໃດກໍຕາມ, ໃນຄວາມເປັນຈິງແລ້ວ ພວກເຂົາບໍ່ຮູ້ຈັກພຣະເຈົ້າ ແລະ ບໍ່ເວົ້າຫຍັງນອກຈາກຄຳເວົ້າທີ່ວ່າງເປົ່າ. ແຕ່ເມື່ອປຽບທຽບກັບອະດີດແລ້ວ, ພວກເຂົາແມ່ນໄດ້ກ້າວໜ້າຫຼາຍ ແຕ່ເຖິງຢ່າງນັ້ນກໍຕາມ ມັນກໍຍັງແຕກຕ່າງຫຼາຍຈາກພຣະເຈົ້າທີ່ແທ້ຈິງ. ເປັນຫຍັງພຣະເຈົ້າຈຶ່ງເວົ້າສະເໝີວ່າ "ແຕ່ລະມື້ ເຮົາຍ່າງໃນທ່າມກາງການເຄື່ອນໄຫວຂອງຜູ້ຄົນຢ່າງບໍ່ຢຸດຢັ້ງ ແລະ ແຕ່ລະມື້ເຮົາປະຕິບັດງານພາຍໃນທຸກຄົນ"? ຍິ່ງພຣະເຈົ້າເວົ້າສິ່ງດັ່ງກ່າວຫຼາຍສໍ່າໃດ ຜູ້ຄົນຍິ່ງສາມາດປຽບທຽບພວກເຂົາກັບການກະທຳຂອງພຣະເຈົ້າທີ່ແທ້ຈິງໃນປັດຈຸບັນຫຼາຍຊໍ່ານັ້ນ ແລະ ສະນັ້ນ ພວກເຂົາຈຶ່ງສາມາດຮູ້ຈັກພຣະເຈົ້າທີ່ແທ້ຈິງໃນຄວາມເປັນຈິງຫຼາຍກວ່າເກົ່າ. ຍ້ອນພຣະທຳຂອງພຣະເຈົ້າຖືກກ່າວຈາກມຸມມອງຂອງເນື້ອໜັງ ແລະ ກ່າວໂດຍນຳໃຊ້ພາສາຂອງຄວາມເປັນມະນຸດ, ຜູ້ຄົນຈຶ່ງສາມາດຮູ້ຄຸນຄ່າຂອງພຣະທຳຂອງພຣະເຈົ້າ ໂດຍການປະເມີນພຣະທຳໃສ່ວັດຖຸສິ່ງຂອງຕ່າງໆ ແລະ ດ້ວຍເຫດນັ້ນ ຈຶ່ງໄດ້ບັນລຸຜົນຢ່າງໃຫຍ່ຫຼວງ. ນອກຈາກນັ້ນ, ພຣະເຈົ້າໄດ້ກ່າວກ່ຽວກັບພາບຫຼັກຂອງ "ເຮົາ" ທີ່ຢູ່ໃນໃຈຂອງຜູ້ຄົນ ແລະ "ເຮົາ" ໃນຄວາມເປັນຈິງຊໍ້າແລ້ວຊໍ້າອີກ ເຊິ່ງເຮັດໃຫ້ຜູ້ຄົນເຕັມໃຈຫຼາຍຂຶ້ນໃນການກຳຈັດພາບຫຼັກຂອງພຣະເຈົ້າທີ່ຢູ່ໃນໃຈຂອງພວກເຂົາ ແລະ ດ້ວຍເຫດນັ້ນ ກໍເຕັມໃຈທີ່ຈະຮູ້ຈັກ ແລະ ພົວພັນກັບພຣະເຈົ້າທີ່ແທ້ຈິງ. ນີ້ແມ່ນສະຕິປັນຍາແຫ່ງພຣະທຳຂອງພຣະເຈົ້າ. ຍິ່ງພຣະເຈົ້າເວົ້າສິ່ງດັ່ງກ່າວຫຼາຍສໍ່າໃດ ກໍຍິ່ງມີຜົນປະໂຫຍດຢ່າງໃຫຍ່ຕໍ່ຄວາມຮູ້ຂອງຜູ້ຄົນກ່ຽວກັບພຣະເຈົ້າ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າວ່າ "ຖ້າເຮົາບໍ່ໄດ້ກາຍເປັນເນື້ອໜັງ, ມະນຸດຈະບໍ່ມີມື້ຮູ້ຈັກເຮົາ ແລະ ເຖິງວ່າ ເຂົາຈະຮູ້ຈັກເຮົາ ແຕ່ຄວາມຮູ້ດັ່ງກ່າວນັ້ນຍັງບໍ່ແມ່ນເປັນພຽງແນວຄວາມຄິດບໍ?" ແທ້ຈິງແລ້ວ ຖ້າຜູ້ຄົນຈຳເປັນຕ້ອງຮູ້ຈັກພຣະເຈົ້າຕາມແນວຄິດຂອງຕົນເອງ, ມັນກໍຈະງ່າຍສຳລັບພວກເຂົາ; ພວກເຂົາຈະສະບາຍ ແລະ ມີຄວາມສຸກ ແລະ ດ້ວຍເຫດນັ້ນ ພຣະເຈົ້າກໍຈະເລື່ອນລອຍຕະຫຼອດໄປ ແລະ ບໍ່ເປັນຈິງໃນໃຈຂອງຜູ້ຄົນ ເຊິ່ງຈະພິສູດໄດ້ວ່າ ຊາຕານເປັນຜູ້ປົກຄອງຈັກກະວານທັງໝົດ ແລະ ບໍ່ແມ່ນພຣະເຈົ້າ; ສະນັ້ນ, ພຣະທຳຂອງພຣະເຈົ້າທີ່ວ່າ "ເຮົາໄດ້ເອົາອຳນາດຂອງເຮົາກັບຄືນມາ" ຈະຍັງວ່າງເປົ່າຕະຫຼອດການ.

ເມື່ອຄວາມເປັນພຣະເຈົ້າເລີ່ມປະຕິບັດໂດຍກົງ, ນັ້ນຍັງແມ່ນເວລາທີ່ອານາຈັກໄດ້ລົງມາສູ່ໂລກມະນຸດຢ່າງເປັນທາງການ. ແຕ່ສິ່ງທີ່ຖືກກ່າວໃນນີ້ກໍຄື ອານາຈັກໄດ້ລົງມາສູ່ທ່າມກາງມະນຸດ, ບໍ່ແມ່ນອານາຈັກຖືກຈັດຕັ້ງຂຶ້ນໃນທ່າມກາງມະນຸດ ແລະ ດ້ວຍເຫດນັ້ນ ສິ່ງທີ່ຖືກກ່າວໃນປັດຈຸບັນ ແມ່ນ

ກ່ຽວກັບການສ້າງອານາຈັກ ແລະ ບໍ່ແມ່ນການທີ່ອານາຈັກຖືກຈັດຕັ້ງຂຶ້ນ. ເປັນຫຍັງພຣະເຈົ້າຈຶ່ງເວົ້າຕະຫຼອດວ່າ "ທຸກສິ່ງມິດງຽບລົງ"? ມັນເປັນໄປໄດ້ບໍ ທີ່ທຸກສິ່ງຈະຢຸດນິ່ງໄປໝົດ? ເປັນໄປໄດ້ບໍ ທີ່ພູເຂົາທີ່ຍິ່ງໃຫຍ່ມິດງຽບລົງ? ແລ້ວເປັນຫຍັງຜູ້ຄົນຈຶ່ງບໍ່ຮູ້ສຶກເຖິງສິ່ງນີ້? ເປັນໄປໄດ້ບໍວ່າ ພຣະທຳຂອງພຣະເຈົ້າບໍ່ຖືກຕ້ອງ? ຫຼື ພຣະເຈົ້າເວົ້າເກີນຄວາມຈິງ? ຍ້ອນວ່າ ທຸກສິ່ງທີ່ພຣະເຈົ້າເຮັດແມ່ນຖືກດຳເນີນພາຍໃນບາງສະພາບແວດລ້ອມ ແຕ່ບໍ່ມີໃຜຮູ້ເຖິງສິ່ງນີ້ ຫຼື ບໍ່ສາມາດເບິ່ງເຫັນສິ່ງນີ້ດ້ວຍຕາຂອງພວກເຂົາເອງ ແລະ ສິ່ງດຽວທີ່ຜູ້ຄົນສາມາດເຮັດແມ່ນຟັງພຣະເຈົ້າກ່າວ. ຍ້ອນຄວາມຍິ່ງໃຫຍ່ທີ່ພຣະເຈົ້າກະທຳ, ເມື່ອພຣະເຈົ້າມາຮອດ ກໍຈະຄືກັບວ່າ ມີການປ່ຽນແປງຢ່າງຍິ່ງໃຫຍ່ໃນສະຫວັນ ແລະ ແຜ່ນດິນໂລກ; ແລະ ສຳລັບພຣະເຈົ້າແລ້ວ ປາກົດວ່າ ທຸກຄົນກຳລັງເຝົ້າເບິ່ງເຫດການນີ້ຢູ່. ໃນປັດຈຸບັນ, ຄວາມຈິງຍັງບໍ່ທັນເກີດຂຶ້ນເທື່ອ. ຜູ້ຄົນພຽງແຕ່ຮຽນຮູ້ເລັກນ້ອຍຈາກສ່ວນໜຶ່ງຂອງຄວາມໝາຍຕາມຂໍ້ພຣະທຳຂອງພຣະເຈົ້າໂດຍກົງ. ຄວາມໝາຍທີ່ແທ້ຈິງຍັງລໍຖ້າເວລາທີ່ພວກເຂົາກຳຈັດແນວຄິດຂອງພວກເຂົາ; ຫຼັງຈາກນັ້ນ ພວກເຂົາຈຶ່ງຈະຮູ້ເຖິງສິ່ງທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດກຳລັງປະຕິບັດເທິງແຜ່ນດິນໂລກ ແລະ ໃນສະຫວັນໃນປັດຈຸບັນ. ທ່າມກາງປະຊາຊົນຂອງພຣະເຈົ້າໃນປະເທດຈີນ ບໍ່ມີພຽງແຕ່ພິດຂອງມັງກອນແດງທີ່ຍິ່ງໃຫຍ່. ແຕ່ທຳມະຊາດຂອງມັງກອນແດງທີ່ຍິ່ງໃຫຍ່ແມ່ນຖືກເປີດເຜີຍຢ່າງຫຼວງຫຼາຍ ແລະ ຢ່າງຊັດເຈນໃນພວກເຂົາເຊັ່ນກັນ. ແຕ່ພຣະເຈົ້າບໍ່ເວົ້າກ່ຽວກັບສິ່ງນີ້ໂດຍກົງ, ພຽງແຕ່ກ່າວໜ້ອຍໜຶ່ງ ກ່ຽວກັບພິດຂອງມັງກອນແດງທີ່ຍິ່ງໃຫຍ່. ດ້ວຍວິທີນີ້, ພຣະອົງບໍ່ໄດ້ເປີດເຜີຍບາດແຜຂອງມະນຸດໂດຍກົງ ເຊິ່ງເປັນປະໂຫຍດຫຼາຍຕໍ່ຄວາມກ້າວໜ້າຂອງມະນຸດ. ລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ບໍ່ມັກໃຫ້ຖືກເອີ້ນວ່າ ເປັນລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ຢູ່ຕໍ່ໜ້າຄົນອື່ນ. ມັນຄືກັບວ່າ ຄຳສັບທີ່ວ່າ "ມັງກອນແດງທີ່ຍິ່ງໃຫຍ່" ໄດ້ນຳເອົາຄວາມອັບອາຍມາສູ່ພວກເຂົາ; ບໍ່ມີຜູ້ໃດໃນບັນດາພວກເຂົາເຕັມໃຈເວົ້າຄຳນີ້ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າແຕ່ວ່າ "ຂັ້ນຕອນນີ້ຂອງພາລະກິດຂອງເຮົາແມ່ນສຸມໃສ່ພວກເຈົ້າເປັນຫຼັກ ແລະ ນີ້ແມ່ນດ້ານໜຶ່ງຂອງຄວາມໝາຍຂອງການບັງເກີດເປັນມະນຸດຂອງເຮົາໃນປະເທດຈີນ". ຄວາມເປັນຈິງກໍຄືພຣະເຈົ້າແມ່ນມາປົກຄອງຕົວແທນແບບຫົວບູຮານຂອງລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ໂດຍສະເພາະ ເຊິ່ງນັ້ນຄືຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າໃນປະເທດຈີນ.

"ເມື່ອເຮົາມາຢູ່ໃນທ່າມກາງ ມະນຸດດ້ວຍຕົວເອງ, ທູດສະຫວັນກໍເລີ່ມພາລະກິດຂອງການລ້ຽງດູໄປພ້ອມໆກັນ". ແທ້ຈິງແລ້ວ ພຣະວິນຍານຂອງພຣະເຈົ້າບໍ່ໄດ້ມາເທິງໂລກມະນຸດໃນເວລາທູດສະຫວັນເລີ່ມພາລະກິດຂອງພວກເຂົາໃນທ່າມກາງທຸກຄົນເທົ່ານັ້ນ. ກົງກັນຂ້າມ, ພາລະກິດສອງຢ່າງນີ້ນັ້ນກໍຄືພາລະກິດຂອງຄວາມເປັນພຣະເຈົ້າ ແລະ ການລ້ຽງດູຂອງທູດສະຫວັນ ແມ່ນຖືກດຳເນີນໄປພ້ອມໆກັນ. ຕໍ່ຈາກນັ້ນ ພຣະເຈົ້າກໍກ່າວເລັກນ້ອຍກ່ຽວກັບການລ້ຽງດູຂອງທູດສະຫວັນ. ເມື່ອພຣະອົງກ່າວວ່າ "ພຣະບຸດ ແລະ ປະຊາຊົນທຸກຄົນບໍ່ພຽງແຕ່ໄດ້ຮັບການທົດສອບ ແລະ ການລ້ຽງດູເທົ່ານັ້ນ ແຕ່ຍັງສາມາດເຫັນປະກົດການຂອງນິມິດທຸກປະເພດດ້ວຍຕາຂອງພວກເຂົາເອງ", ຜູ້ຄົນສ່ວນໃຫຍ່ມີຈິນຕະນາການຫຼວງຫຼາຍກ່ຽວກັບຄຳວ່າ "ນິມິດ". ນິມິດໝາຍເຖິງປະກົດການເໜືອທຳມະຊາດທີ່

ເກີດຂຶ້ນໃນຈິນຕະນາການຂອງຜູ້ຄົນ. ແຕ່ເນື້ອຫາຂອງພາລະກິດຍັງແມ່ນຄວາມຮູ້ກ່ຽວກັບພຣະເຈົ້າທີ່ແທ້ຈິງ. ນິມິດແມ່ນວິທີທາງໃນການປະຕິບັດພາລະກິດຂອງທູດສະຫວັນ. ນິມິດອາດຈະເຮັດໃຫ້ຜູ້ຄົນຮູ້ສຶກ ຫຼື ມີຄວາມຝັນ, ເຮັດໃຫ້ພວກເຂົາເຫັນການມີຢູ່ຂອງທູດສະຫວັນ. ແຕ່ມະນຸດກໍຍັງບໍ່ສາມາດເຫັນທູດສະຫວັນໄດ້. ວິທີການທີ່ທູດສະຫວັນປະຕິບັດພາລະກິດໃນທ່າມກາງພຣະບຸດ ແລະ ປະຊາຊົນຂອງພຣະເຈົ້າແມ່ນເພື່ອໃຫ້ແສງສະຫວ່າງ ແລະ ແສງເຍືອງທາງແກ່ພວກເຂົາໂດຍກົງ ເພີ່ມກັບການຈັດການ ແລະ ການເຮັດໃຫ້ພວກເຂົາແຕກຫັກ. ໜ້ອຍທີ່ສຸດ ທີ່ພວກເຂົາຈະກ່າວພຣະທຳ. ແນ່ນອນຍົກເວັ້ນການສື່ສານລະຫວ່າງຜູ້ຄົນ; ນີ້ແມ່ນສິ່ງທີ່ເກີດຂຶ້ນໃນບັນດາປະເທດທີ່ຢູ່ນອກປະເທດຈີນ. ພາຍໃນພຣະທຳຂອງພຣະເຈົ້າມີການເປີດເຜີຍສະພາບຂອງການດຳລົງຊີວິດຂອງມະນຸດຊາດທັງໝົດ. ໂດຍທຳມະຊາດແລ້ວ, ນີ້ແມ່ນແນໃສ່ລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ໂດຍກົງ. ໃນສະພາບຈິດວິນຍານຕ່າງໆຂອງມະນຸດຊາດ, ພຣະເຈົ້າເລືອກເອົາຕົວແທນເພື່ອໃຊ້ເປັນແບບຢ່າງ. ສະນັ້ນ, ພຣະທຳຂອງພຣະເຈົ້າຈຶ່ງເຮັດໃຫ້ຜູ້ຄົນປະເປືອຍ ແລະ ພວກເຂົາບໍ່ຮູ້ເຖິງຄວາມອັບອາຍ ຫຼື ບໍ່ຊັ້ນພວກເຂົາກໍບໍ່ມີເວລາທີ່ຈະລີ້ຈາກແສງໄຟ ແລະ ຖືກເອົາຊະນະໃນເກມຂອງຕົວເອງ. ລັກສະນະຕ່າງໆຂອງມະນຸດແມ່ນເຕັມໄປດ້ວຍຮູບພາບທີ່ພຣະເຈົ້າໄດ້ແຕ້ມຕັ້ງແຕ່ສະໄໝບູຮານຈົນເຖິງປັດຈຸບັນ ແລະ ພຣະອົງຈະແຕ້ມຈາກປັດຈຸບັນຈົນເຖິງອະນາຄົດ. ສິ່ງດຽວທີ່ພຣະອົງແຕ້ມກໍຄືຄວາມຂີ້ຮ້າຍຂອງມະນຸດ: ບາງຄົນຮ້ອງໄຫ້ໃນຄວາມມືດ ໂດຍເບິ່ງຄືວ່າ ໂສກເສົ້າເສຍໃຈ ຍ້ອນຕາຂອງພວກເຂົາໄດ້ສູນເສຍການແນມເຫັນ, ບາງຄົນຫົວ, ບາງຄົນຖືກຄື້ນທະເລຕີ, ບາງຄົນຍ່າງຕາມທາງເທິງພູເຂົາ, ບາງຄົນຊອກຫາໃນທ່າມກາງພູຜາປ່າໄມ້ທີ່ກວ້າງໃຫຍ່, ສັ່ນເຊັນດ້ວຍຄວາມຢ້ານກົວ ຄືກັນກັບໂຕນົກທີ່ຕື່ນຕົກໃຈຍ້ອນສຽງຂອງສາຍຄັນທະນູ, ຢ້ານກົວຫຼາຍຈາກການຖືກສັດປ່າກິນຢູ່ໃນພູເຂົາ. ໃນມືຂອງພຣະເຈົ້າ, ລັກສະນະທ່າທາງຂີ້ຮ້າຍເຫຼົ່ານີ້ໄດ້ກາຍເປັນສິ່ງປະທັບໃຈ, ພາບທີ່ຄືກັບຊີວິດຈິງ, ສ່ວນໃຫຍ່ແມ່ນເປັນພາບທີ່ໜ້າຢ້ານກົວຫຼາຍຈົນບໍ່ກ້າເບິ່ງ ຫຼື ຢ້ານກົວຈົນເຮັດໃຫ້ຂົນຫົວລຸກ ແລະ ເຮັດໃຫ້ພວກເຂົາງຶງ ແລະ ສັບສົນ. ໃນສາຍຕາຂອງພຣະເຈົ້າ, ທຸກສິ່ງທີ່ສະແດງອອກໂດຍມະນຸດແມ່ນບໍ່ມີຫຍັງ ນອກຈາກຄວາມຂີ້ຮ້າຍ ແລະ ເຖິງແມ່ນວ່າ ມັນອາດຈະເຮັດໃຫ້ມີຄວາມສົງສານ ແຕ່ມັນກໍຍັງຂີ້ຮ້າຍຢູ່ດີ. ຈຸດທີ່ເຮັດໃຫ້ມະນຸດແຕກຕ່າງຈາກພຣະເຈົ້າກໍຄື ຄວາມອ່ອນແອຂອງມະນຸດ ທີ່ຂຶ້ນຢູ່ກັບຄວາມພໍໃຈທີ່ຈະສະແດງຄວາມເມດຕາກະລຸນາຕໍ່ຜູ້ອື່ນ. ຢ່າງໃດກໍຕາມ, ພຣະເຈົ້າແມ່ນຜູ້ເກົ່າສະເໝີ ເຊິ່ງໝາຍຄວາມວ່າ ພຣະອົງມີທັດສະນະຄະຕິຄືເກົ່າສະເໝີ. ພຣະອົງບໍ່ໄດ້ໃຈດີຄືກັນກັບທີ່ຜູ້ຄົນຈິນຕະນາສະເໝີ ດັ່ງຄືກັນກັບແມ່ ທີ່ຄິດນຳລູກຕະຫຼອດເວລາ. ໃນຄວາມເປັນຈິງແລ້ວ, ຖ້າພຣະເຈົ້າບໍ່ຕ້ອງການໃຊ້ວິທີການຕ່າງໆ ເພື່ອເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ ກໍຈະບໍ່ມີທາງທີ່ພຣະອົງຈະຍອມຕໍ່ຄວາມອັບອາຍດັ່ງກ່າວ ແລະ ຍອມໃຫ້ພຣະອົງຢູ່ພາຍໃຕ້ຂໍ້ຈຳກັດຂອງມະນຸດ. ຕາມອຸປະນິໄສຂອງພຣະເຈົ້າ, ທຸກສິ່ງທີ່ຜູ້ຄົນເຮັດ ແລະ ເວົ້າແມ່ນເຮັດໃຫ້ພຣະເຈົ້າໂກດຮ້າຍ ແລະ ພວກເຂົາຄວນຖືກຂ້ຽນຕີ. ໃນສາຍຕາຂອງພຣະເຈົ້າ ບໍ່ມີຜູ້ໃດທີ່ໄດ້ມາດຕະຖານ ແລະ ພວກເຂົາທຸກຄົນລ້ວນແລ້ວແຕ່ຈະຖືກໂຈມຕີໂດຍພຣະເຈົ້າ. ຍ້ອນຫຼັກການຂອງພາລະກິດຂອງພຣະເຈົ້າໃນປະເທດຈີນ ແລະ ຍິ່ງໄປກວ່ານັ້ນ ຍ້ອນ

ທຳມະຊາດຂອງມັງກອນແດງທີ່ຍິ່ງໃຫຍ່ ພ້ອມກັບຄວາມຈິງທີ່ວ່າ ປະເທດຈີນແມ່ນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ເປັນດິນແດນທີ່ພຣະເຈົ້າທີ່ບັງເກີດເປັນມະນຸດອາໄສຢູ່, ພຣະເຈົ້າຈຶ່ງຕ້ອງກືນຄວາມໂກດຮ້າຍຂອງຕົວເອງ ແລະ ເອົາຊະນະລູກຫຼານທັງໝົດຂອງມັງກອນແດງທີ່ຍິ່ງໃຫຍ່; ແຕ່ພຣະອົງຈະກຽດຊັງລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ສະເໝີ ເຊິ່ງກໍຄື ພຣະອົງຈະກຽດຊັງທຸກສິ່ງທີ່ມາຈາກມັງກອນແດງທີ່ຍິ່ງໃຫຍ່ສະເໝີ ແລະ ສິ່ງນີ້ຈະບໍ່ມີວັນປ່ຽນແປງ.

ບໍ່ມີໃຜເຄີຍຮູ້ຈັກການກະທຳຂອງພຣະເຈົ້າ ແລະ ບໍ່ມີສິ່ງໃດເຄີຍແນມເຫັນການກະທຳຂອງພຣະອົງ. ຍົກຕົວຢ່າງ, ໃນເວລາທີ່ພຣະເຈົ້າກັບຄືນໄປພູເຂົາຊີໂອນ, ແມ່ນໃຜຮູ້ເຖິງສິ່ງນີ້ແດ່? ດ້ວຍເຫດນັ້ນ, ພຣະທຳທີ່ວ່າ "ເຮົາມາຢູ່ທ່າມກາງມະນຸດຢ່າງງຽບໆ ແລະ ເຮົາກໍລອຍຈາກໄປຢ່າງມິດງຽບ. ມີໃຜເຄີຍເຫັນເຮົາບໍ່?" ໄດ້ສະແດງໃຫ້ເຫັນວ່າ ມະນຸດແມ່ນຂາດຄວາມສາມາດໃນການຍອມຮັບປະກົດການຂອງໂລກວິນຍານຢ່າງແທ້ຈິງ. ໃນອະດີດ, ພຣະເຈົ້າໄດ້ກ່າວໄວ້ວ່າ ເມື່ອພຣະອົງກັບຄືນສູ່ພູເຂົາຊີໂອນ "ຕາເວັນແມ່ນຮ້ອນເປັນໄຟ, ເດືອນກໍໃສແຈ້ງ". ຍ້ອນຜູ້ຄົນຍັງໝົກມຸ້ນກັບການກັບຄືນສູ່ພູເຂົາຊີໂອນຂອງພຣະເຈົ້າ ແລະ ຍ້ອນພວກເຂົາຍັງບໍ່ໄດ້ປ່ອຍວາງ ພຣະເຈົ້າກໍຈະກ່າວພຣະທຳທີ່ວ່າ "ຕາເວັນແມ່ນຮ້ອນເປັນໄຟ, ເດືອນແມ່ນໃສແຈ້ງ" ເພື່ອໃຫ້ສອດຄ່ອງກັບແນວຄິດຂອງຜູ້ຄົນໂດຍກົງ. ດ້ວຍເຫດນັ້ນ, ເມື່ອແນວຄິດຂອງຜູ້ຄົນຖືກພຣະທຳຂອງພຣະເຈົ້າຕີສອນ, ພວກເຂົາກໍເຫັນວ່າການກະທຳຂອງພຣະເຈົ້າແມ່ນເປັນຕາອັດສະຈັນ ແລະ ພວກເຂົາເຫັນວ່າ ພຣະທຳຂອງພຣະອົງແມ່ນເລິກເຊິ່ງ, ບໍ່ສາມາດຢັ່ງເຖິງໄດ້ ແລະ ບໍ່ສາມາດເຂົ້າໃຈໄດ້ໂດຍທຸກຄົນ; ສະນັ້ນ, ພວກເຂົາຈຶ່ງເອົາເລື່ອງດັ່ງກ່າວນີ້ວາງໄວ້ທາງຂ້າງ ແລະ ຮູ້ສຶກເຖິງຄວາມແຈ່ມແຈ້ງໃນຈິດໃຈຂອງພວກເຂົາ ຄືກັບວ່າພຣະເຈົ້າໄດ້ກັບຄືນໄປພູເຂົາຊີໂອນແລ້ວ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຶ່ງບໍ່ໄດ້ສົນໃຈກັບເລື່ອງດັ່ງກ່າວນີ້ຫຼາຍປານໃດ. ນັບແຕ່ນັ້ນມາ ພວກເຂົາຍອມຮັບພຣະທຳຂອງພຣະເຈົ້າດ້ວຍຫົວໃຈດຽວ ແລະ ຈິດໃຈດຽວ ແລະ ບໍ່ກັງວົນອີກຕໍ່ໄປວ່າ ໄພພິບັດຈະເກີດຂຶ້ນພາຍຫຼັງທີ່ພຣະເຈົ້າກັບຄືນສູ່ພູເຂົາຊີໂອນ. ເມື່ອນັ້ນ ມັນກໍຈະງ່າຍສຳລັບຜູ້ຄົນ ໃນການຍອມຮັບພຣະທຳຂອງພຣະເຈົ້າ, ສຸມຄວາມຕັ້ງໃຈທັງໝົດຂອງພວກເຂົາຕໍ່ພຣະທຳຂອງພຣະເຈົ້າ ແລະ ປ່ອຍໃຫ້ພວກເຂົາບໍ່ມີຄວາມປາດຖະໜາທີ່ຈະພິຈາລະນາສິ່ງອື່ນໃດອີກ.

# ບົດເສີມທີ
# ບົດທີ 2

ເມື່ອຜູ້ຄົນເຫັນພຣະເຈົ້າທີ່ແທ້ຈິງ, ເມື່ອພວກເຂົາດຳລົງຊີວິດຂອງພວກເຂົາດ້ວຍຕົວເອງ, ຍ່າງຄຽງຂ້າງ ແລະ ອາໄສຢູ່ກັບພຣະເຈົ້າ ພວກເຂົາກໍຈະວາງຄວາມສົງໄສ ທີ່ຢູ່ໃນໃຈຂອງພວກເຂົາເປັນເວລາຫຼາຍປີໄວ້ທາງຂ້າງ. ຄວາມຮູ້ກ່ຽວກັບພຣະເຈົ້າ ທີ່ມີການເວົ້າເຖິງກ່ອນນັ້ນ ແມ່ນເປັນພຽງຂັ້ນຕອນທຳອິດເທົ່ານັ້ນ; ເຖິງວ່າ ຜູ້ຄົນຈະມີຄວາມຮູ້ກ່ຽວກັບພຣະເຈົ້າ ແຕ່ຍັງມີຄວາມສົງໄສຢ່າງຫຼວງຫຼາຍເຫຼືອຢູ່ໃນໃຈຂອງພວກເຂົາຄືເກົ່າ. ພຣະເຈົ້າມາແຕ່ໃສ? ພຣະເຈົ້າກິນບໍ? ພຣະເຈົ້າແມ່ນແຕກຕ່າງຈາກຄົນທຳມະດາຫຼາຍບໍ? ສຳລັບພຣະເຈົ້າແລ້ວ, ການຈັດການກັບຜູ້ຄົນແມ່ນສິ່ງທີ່ງ່າຍດາຍ ແລະ ເປັນພຽງແຕ່ການຫຼິ້ນຂອງເດັກນ້ອຍບໍ? ທຸກສິ່ງທີ່ກ່າວຈາກປາກຂອງພຣະເຈົ້າແມ່ນຄວາມລຶກລັບຂອງສະຫວັນບໍ? ທຸກສິ່ງທີ່ພຣະອົງກ່າວແມ່ນສູງສົ່ງກວ່າທຸກສິ່ງທີ່ມີຊີວິດທີ່ຖືກສ້າງຂຶ້ນບໍ? ແສງສະຫວ່າງແມ່ນຊ່ອງມາຈາກຕາຂອງພຣະເຈົ້າບໍ? ແລະ ສິ່ງອື່ນໆອີກ, ນີ້ແມ່ນຄວາມສາມາດຂອງແນວຄວາມຄິດຂອງຜູ້ຄົນທັງໝົດ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ພວກເຈົ້າຄວນເຂົ້າໃຈ ແລະ ເຂົ້າສູ່ກ່ອນທຸກສິ່ງ. ໃນແນວຄວາມຄິດຂອງຜູ້ຄົນ ພຣະເຈົ້າທີ່ບັງເກີດເປັນມະນຸດ ແມ່ນຍັງເປັນພຣະເຈົ້າທີ່ເລື່ອນລອຍຢູ່. ຖ້າບໍ່ຜ່ານຄວາມຮູ້ທີ່ແທ້ຈິງ, ຜູ້ຄົນຈະບໍ່ມີວັນສາມາດເຂົ້າໃຈເຮົາ ແລະ ຈະບໍ່ມີວັນເຫັນການກະທຳຂອງເຮົາໃນປະສົບການຂອງພວກເຂົາ. ມັນເປັນຍ້ອນວ່າ ເຮົາໄດ້ກາຍເປັນເນື້ອໜັງ ຜູ້ຄົນຈຶ່ງ "ບໍ່ສາມາດເຂົ້າໃຈ" ຄວາມປະສົງຂອງເຮົາ. ຖ້າເຮົາບໍ່ໄດ້ກາຍເປັນເນື້ອໜັງ ແລະ ຍັງຢູ່ໃນສະຫວັນ, ຍັງຢູ່ໃນໂລກແຫ່ງວິນຍານ ແລ້ວຜູ້ຄົນຈະ "ຮູ້ຈັກ" ເຮົາ, ພວກເຂົາຈະກົ້ມລົງ ແລະ ນະມັດສະການເຮົາ ແລະ ເວົ້າກ່ຽວກັບ "ຄວາມຮູ້" ຂອງພວກເຂົາກ່ຽວກັບເຮົາຜ່ານປະສົບການຂອງພວກເຂົາ ແຕ່ຄວາມຮູ້ດັ່ງກ່າວຈະມີປະໂຫຍດຫຍັງ? ຄຸນຄ່າຂອງມັນໃນການເປັນບ່ອນອ້າງອີງຈະແມ່ນຫຍັງ? ຄວາມຮູ້ທີ່ມາຈາກແນວຄວາມຄິດຂອງຜູ້ຄົນຈະສາມາດເປັນຈິງໄດ້ບໍ? ເຮົາບໍ່ຕ້ອງການຄວາມຮູ້ຈາກສະໝອງຂອງຜູ້ຄົນ. ເຮົາຕ້ອງການຄວາມຮູ້ທີ່ແທ້ຈິງ.

ຄວາມປະສົງຂອງເຮົາແມ່ນຖືກເປີດເຜີຍໃນທ່າມກາງພວກເຈົ້າທຸກເວລາ ແລະ ໃນທຸກເວລານັ້ນແມ່ນມີແສງເຍືອງທາງ ແລະ ແສງສະຫວ່າງຂອງເຮົາ. ເມື່ອເຮົາປະຕິບັດໂດຍກົງໃນຄວາມສັກສິດ, ມັນກໍບໍ່ໄດ້ຖືກກັ່ນຕອງຜ່ານສະໝອງ ແລະ ບໍ່ຈຳເປັນຕ້ອງເພີ່ມ "ເຄື່ອງປຸງແຕ່ງ". ນີ້ແມ່ນການປະຕິບັດໂດຍກົງຂອງຄວາມສັກສິດ. ຄວາມສາມາດຂອງຜູ້ຄົນແມ່ນຫຍັງ? ທຸກສິ່ງນັບແຕ່ເວລາແຫ່ງການຊົງສ້າງຈົນເຖິງປັດຈຸບັນບໍ່ໄດ້ຖືກປະຕິບັດດ້ວຍຕົວເຮົາເອງບໍ? ໃນອະດີດ, ເຮົາໄດ້ເວົ້າກ່ຽວກັບພຣະວິນຍານທີ່ຮຸນແຮງເຈັດເທົ່າ ແຕ່ບໍ່ມີໃຜສາມາດເຂົ້າໃຈແກ່ນແທ້ຂອງພຣະອົງ. ແມ່ນແຕ່ໃນເວລາທີ່ພວກເຂົາຮູ້ກ່ຽວກັບສິ່ງນີ້, ພວກເຂົາກໍບໍ່ສາມາດເຂົ້າໃຈຢ່າງຄົບຖ້ວນໄດ້. ເມື່ອເຮົາເຮັດພາລະກິດໃນມະນຸດຊາດທີ່ຖືກຄຸ້ມຄອງໂດຍຄວາມສັກສິດ, ຍ້ອນພາລະກິດນີ້ແມ່ນຖືກດຳເນີນໃນສະຖານະການ ທີ່ຜູ້ຄົນເຊື່ອວ່າ ບໍ່ໄດ້ມີຄວາມເໜືອທຳມະຊາດ ແຕ່ມີຄວາມທຳມະດາ, ສິ່ງນີ້ຈຶ່ງຖືກເອີ້ນວ່າ ເປັນພາລະກິດຂອງ

ພຣະວິນຍານບໍລິສຸດ. ເມື່ອເຮົາເຮັດພາລະກິດໂດຍກົງໃນຄວາມສັກສິດ, ຍ້ອນເຮົາບໍ່ໄດ້ມີຂໍ້ຈຳກັດຈາກແນວຄວາມຄິດຂອງຜູ້ຄົນ ແລະ ບໍ່ໄດ້ຢູ່ພາຍໃຕ້ຂໍ້ຈຳກັດຂອງ "ຄວາມເໜືອທຳມະຊາດ" ໃນແນວຄວາມຄິດຂອງພວກເຂົາ ພາລະກິດນີ້ຈຶ່ງມີຜົນທັນທີ, ເຂົ້າໄປສູ່ໃຈກາງຂອງບັນຫາ ແລະ ຕົງຕໍ່ປະເດັນ. ດ້ວຍເຫດນັ້ນ, ຂັ້ນຕອນນີ້ຂອງພາລະກິດຈຶ່ງບໍລິສຸດກວ່າ, ໄວກວ່າສອງເທົ່າ, ຄວາມຮູ້ຂອງຜູ້ຄົນໄດ້ເລັ່ງຄວາມໄວ ແລະ ພຣະທຳຂອງເຮົາເພີ່ມຂຶ້ນ ເຊິ່ງເຮັດໃຫ້ທຸກຄົນຟ້າວນຳໃຫ້ທັນ. ຍ້ອນຜົນໄດ້ຮັບແມ່ນແຕກຕ່າງກັນ, ຍ້ອນວິທີການ, ທຳມະຊາດ ແລະ ເນື້ອຫາຂອງພາລະກິດຂອງເຮົາບໍ່ຄືກັນ ແລະ ຍິ່ງໄປກວ່ານັ້ນ ຍ້ອນເຮົາໄດ້ເລີ່ມເຮັດພາລະກິດຢ່າງເປັນທາງການໃນເນື້ອໜັງ, ໃນມຸມມອງຂອງສິ່ງທີ່ກ່າວມາກ່ອນໜ້ານັ້ນ ຂັ້ນຕອນນີ້ຂອງພາລະກິດຈຶ່ງຖືກເອີ້ນວ່າ "ເປັນພາລະກິດຂອງພຣະວິນຍານທີ່ຮຸນແຮງເຈັດເທົ່າ". ສິ່ງນີ້ບໍ່ແມ່ນບາງສິ່ງທີ່ບໍ່ມີຕົວຕົນ. ຫຼັງຈາກການພັດທະນາໃນວິທີການທີ່ເຮົາເຮັດພາລະກິດໃນພວກເຈົ້າ ແລະ ຫຼັງຈາກການມາຮອດຂອງອານາຈັກ, ພຣະວິນຍານທີ່ຮຸນແຮງເຈັດເທົ່າຈຶ່ງໄດ້ເລີ່ມພາລະກິດ ແລະ ພາລະກິດນີ້ແມ່ນໄດ້ລົງເລິກຢ່າງຕໍ່ເນື່ອງ ແລະ ມີຄວາມຮຸນແຮງຫຼາຍຂຶ້ນ. ເມື່ອທຸກຄົນເຫັນພຣະເຈົ້າ ແລະ ພວກເຂົາທຸກຄົນໄດ້ເຫັນວ່າ ພຣະວິນຍານຂອງພຣະເຈົ້າແມ່ນຢູ່ທ່າມກາງມະນຸດ, ຄວາມໝາຍທີ່ຄົບຖ້ວນຂອງການບັງເກີດເປັນມະນຸດຂອງເຮົາກໍຖືກເຮັດໃຫ້ຊັດເຈນຂຶ້ນ. ບໍ່ຈຳເປັນຕ້ອງສະຫຼຸບຫຍໍ້. ຜູ້ຄົນຮູ້ຈັກສິ່ງນີ້ໂດຍທຳມະຊາດ.

ໃນການພິຈາລະນາຫຼາຍດ້ານ, ວິທີການທີ່ເຮົາໃຊ້ເຮັດພາລະກິດ, ຂັ້ນຕອນຂອງພາລະກິດຂອງເຮົາ, ນໍ້າສຽງຂອງພຣະທຳຂອງເຮົາໃນປັດຈຸບັນ ແລະ ອື່ນໆ, ມີແຕ່ສິ່ງທີ່ມາຈາກປາກຂອງເຮົາຕອນນີ້ເທົ່ານັ້ນ ທີ່ເປັນ "ພຣະວັດຈະນະຂອງພຣະວິນຍານທັງເຈັດ" ໃນຄວາມໝາຍທີ່ແທ້ຈິງ. ເຖິງວ່າ ເຮົາຍັງໄດ້ເວົ້າໃນອະດີດ ແຕ່ນັ້ນກໍແມ່ນໃນຊ່ວງຂັ້ນຕອນຂອງການສ້າງຄຣິສຕະຈັກ. ມັນຄ້າຍຄືກັບບົດນຳ ແລະ ສາລະບານໃນນະວະນິຍາຍ ແລະ ບໍ່ໄດ້ມີແກ່ນແທ້; ມີແຕ່ພຣະວັດຈະນະໃນປັດຈຸບັນເທົ່ານັ້ນ ທີ່ສາມາດຖືກເອີ້ນໄດ້ວ່າ ເປັນແກ່ນແທ້ຂອງພຣະວັດຈະນະຂອງພຣະວິນຍານທັງເຈັດ. "ພຣະວັດຈະນະຂອງພຣະວິນຍານທັງເຈັດ" ແມ່ນໝາຍເຖິງພຣະວັດຈະນະທີ່ມາຈາກບັນລັງ ເຊິ່ງຖ້າຈະວ່າໄປແລ້ວ ສິ່ງເຫຼົ່ານັ້ນແມ່ນຖືກກ່າວໂດຍກົງໃນຄວາມສັກສິດ. ໃນຊ່ວງເວລາທີ່ພຣະວັດຈະນະຂອງເຮົາໄດ້ຫັນໄປຫາການເປີດເຜີຍຄວາມລຶກລັບຂອງສະຫວັນ ແມ່ນຊ່ວງເວລາທີ່ເຮົາກ່າວໂດຍກົງໃນຄວາມສັກສິດ. ເວົ້າອີກແບບໜຶ່ງກໍຄື ເຮົາເປີດເຜີຍຄວາມລຶກລັບ ແລະ ສະຖານະການຂອງໂລກແຫ່ງວິນຍານທັງໝົດໂດຍກົງ ໂດຍທີ່ບໍ່ຖືກຈຳກັດໂດຍຄວາມເປັນມະນຸດ. ເປັນຫຍັງເຮົາຈຶ່ງເວົ້າວ່າ ກ່ອນໜ້ານັ້ນເຮົາຢູ່ພາຍໃຕ້ຂໍ້ຈຳກັດຂອງຄວາມເປັນມະນຸດ? ສິ່ງນີ້ຈຳເປັນຕ້ອງມີຄຳອະທິບາຍ. ໃນສາຍຕາຂອງຜູ້ຄົນ, ບໍ່ມີໃຜສາມາດເປີດເຜີຍຄວາມລຶກລັບຂອງສະຫວັນ; ຖ້າບໍ່ແມ່ນຍ້ອນພຣະເຈົ້າ ກໍຈະບໍ່ມີໃຜອື່ນເທິງແຜ່ນດິນໂລກ ທີ່ສາມາດຮູ້ຈັກຄວາມລຶກລັບເຫຼົ່ານີ້ໄດ້. ສະນັ້ນ, ເຮົາຈຶ່ງຈັດການກັບແນວຄວາມຄິດຂອງຜູ້ຄົນ ແລະ ເວົ້າວ່າ ໃນອະດີດ ເຮົາບໍ່ໄດ້ເປີດເຜີຍຄວາມລຶກລັບໃດໆ ຍ້ອນເຮົາຢູ່ພາຍໃຕ້ຂໍ້ຈຳກັດຂອງຄວາມເປັນມະນຸດ. ຢ່າງໃດກໍຕາມ ໂດຍສະເພາະແລ້ວ ນີ້ບໍ່ແມ່ນກໍລະນີທີ່ວ່າ: ເນື້ອຫາຂອງພຣະທຳຂອງເຮົາ ແມ່ນແຕກຕ່າງກັນ ເນື່ອງຈາກພາລະກິດຂອງເຮົາແຕກຕ່າງກັນ ແລະ ດ້ວຍເຫດນັ້ນ

ເມື່ອເຮົາເລີ່ມປະຕິບັດພັນທະກິດຂອງເຮົາໃນຄວາມສັກສິດ ເຮົາກໍໄດ້ເປີດເຜີຍຄວາມລຶກລັບ; ໃນອະດີດ ເຮົາຕ້ອງໄດ້ເຮັດພາລະກິດໃນສະຖານະການ ທີ່ທຸກຄົນເຫັນວ່າທຳມະດາ ແລະ ພຣະທຳທີ່ເຮົາເວົ້າແມ່ນສາມາດບັນລຸໄດ້ໃນແນວຄວາມຄິດຂອງຜູ້ຄົນ. ເມື່ອເຮົາເລີ່ມເປີດເຜີຍຄວາມລຶກລັບ, ແນວຄວາມຄິດຂອງຜູ້ຄົນແມ່ນບໍ່ສາມາດຮັບເອົາສິ່ງເຫຼົ່ານີ້ແມ່ນແຕ່ໜຶ່ງ. ພວກມັນບໍ່ຄືກັນກັບຄວາມຄິດຂອງມະນຸດ. ສະນັ້ນ, ເຮົາຈຶ່ງເລີ່ມຫັນໄປເວົ້າຢ່າງເປັນທາງການໃນຄວາມສັກສິດ ແລະ ສິ່ງເຫຼົ່ານີ້ແມ່ນພຣະວັດຈະນະຂອງພຣະວິນຍານທັງເຈັດໃນຄວາມໝາຍທີ່ແທ້ຈິງ. ເຖິງວ່າ ພຣະທຳຂອງອະດີດຈະແມ່ນພຣະວັດຈະນະຈາກບັນລັງ ແຕ່ສິ່ງເຫຼົ່ານັ້ນແມ່ນຖືກກ່າວບົນພື້ນຖານຂອງສິ່ງທີ່ຜູ້ຄົນສາມາດໄດ້ຮັບ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ໄດ້ຖືກກ່າວໂດຍກົງໃນຄວາມສັກສິດ ຜົນຕາມມາກໍຄື ສິ່ງເຫຼົ່ານັ້ນບໍ່ແມ່ນພຣະວັດຈະນະຂອງພຣະວິນຍານທັງເຈັດໃນຄວາມໝາຍທີ່ແທ້ຈິງ.

# ບົດທີ 12

ເມື່ອທຸກຄົນເອົາໃຈໃສ່, ເມື່ອທຸກສິ່ງຖືກສ້າງຄືນໃໝ່ ແລະ ຖືກເຮັດໃຫ້ຟື້ນຄືນໃໝ່, ເມື່ອທຸກຄົນອ່ອນນ້ອມຕໍ່ພຣະເຈົ້າ ໂດຍບໍ່ມີຄວາມກະວົນກະວາຍໃຈ ແລະ ເຕັມໃຈທີ່ຈະແບກຮັບຄວາມຮັບຜິດຊອບທີ່ໜັກໜ່ວງຕໍ່ພາລະຂອງພຣະເຈົ້າ, ນີ້ແມ່ນເວລາທີ່ຟ້າແມບເຫຼື້ອມຈາກທິດຕະເວັນອອກໄດ້ແມບເຫຼື້ອມອອກມາ ໂດຍເຍືອງແສງໄປທົ່ວທິດຕາເວັນອອກສູ່ທິດຕາເວັນຕົກ ແລະ ເຮັດໃຫ້ທົ່ວແຜ່ນດິນໂລກຢ້ານກົວການມາຂອງແສງສະຫວ່າງນີ້; ແລະ ໃນຕອນນີ້ ພຣະເຈົ້າໄດ້ເລີ່ມຊີວິດໃໝ່ອີກຄັ້ງ. ນີ້ເວົ້າໄດ້ວ່າ ໃນຊ່ວງເວລານີ້ ພຣະເຈົ້າໄດ້ເລີ່ມພາລະກິດໃໝ່ຢູ່ເທິງແຜ່ນດິນໂລກ ໂດຍປະກາດຕໍ່ຜູ້ຄົນທົ່ວຈັກກະວານທັງໝົດວ່າ: "ເມື່ອຟ້າແມບເຫຼື້ອມຈາກທິດຕາເວັນອອກ ເຊິ່ງຍັງແມ່ນຊ່ວງເວລາທີ່ເຮົາໄດ້ເລີ່ມກ່າວພຣະທຳຂອງເຮົາ. ເມື່ອຟ້າແມບເຫຼື້ອມ ເຮັດໃຫ້ຈັກກະວານທັງໝົດມີແສງສະຫວ່າງ ແລະ ມີການປ່ຽນແປງເກີດຂຶ້ນໃນດວງດາວທັງໝົດ". ສະນັ້ນ, ເມື່ອໃດທີ່ຟ້າແມບເຫຼື້ອມອອກຈາກທິດຕາເວັນອອກ? ເມື່ອສະຫວັນມືດມົວ ແລະ ແຜ່ນດິນໂລກອ່ອນແສງລົງ ແມ່ນເວລາທີ່ພຣະເຈົ້າເຊື່ອງໃບໜ້າຂອງພຣະອົງຈາກໂລກ ແລະ ແມ່ນຊ່ວງເວລານັ້ນ ທີ່ທຸກສິ່ງຢູ່ກ້ອງສະຫວັນຈະຖືກພາຍຸຍັກໃຫຍ່ຖະລົ່ມ. ໃນຊ່ວງເວລານີ້ເອງທີ່ ທຸກຄົນມີຄວາມຕົກໃຈ, ມີຄວາມຢ້ານກົວຕໍ່ສຽງຟ້າຮ້ອງ, ຢ້ານແສງເຫຼື້ອມຂອງຟ້າແມບເຫຼື້ອມ ແລະ ຍິ່ງມີຄວາມຢ້ານຫຼາຍຕໍ່ການໂຈມຕີຂອງຟ້າຝົນ ຈົນພວກເຂົາສ່ວນໃຫຍ່ຕ້ອງປິດຕາຂອງຕົວເອງ ແລະ ລໍຖ້າໃຫ້ພຣະເຈົ້າປ່ອຍຄວາມໂກດຮ້າຍຂອງພຣະອົງ ແລະ ໂຈມຕີພວກເຂົາ. ເມື່ອສະພາບຕ່າງໆໄດ້ຜ່ານໄປ ຟ້າແມບເຫຼື້ອມຈາກທິດຕະເວັນອອກກໍແມບເຫຼື້ອມຂຶ້ນທັນທີ. ນີ້ໝາຍຄວາມວ່າ ໃນທິດຕາເວັນອອກຂອງໂລກ ຈາກຕອນທີ່ການເປັນພະຍານຂອງພຣະເຈົ້າໄດ້ເລີ່ມຂຶ້ນຈົນຮອດຕອນທີ່ພຣະອົງເລີ່ມເຮັດພາລະກິດ ແລະ ຈົນຮອດຕອນທີ່ຄວາມເປັນພຣະເຈົ້າໄດ້ເລີ່ມຖືອຳນາດສູງສຸດໄປທົ່ວແຜ່ນດິນໂລກ. ນີ້ແມ່ນສາຍເປັ່ງປະກາຍຂອງຟ້າແມບເຫຼື້ອມຈາກທິດຕະເວັນອອກ ເຊິ່ງເຄີຍສ່ອງແສງໃສ່ຈັກກະວານທັງໝົດ. ເມື່ອບັນດາປະເທດຕ່າງໆຂອງແຜ່ນດິນໂລກກາຍມາເປັນອານາຈັກຂອງພຣະຄຣິດ ແມ່ນເມື່ອຈັກກະວານທັງປວງໄດ້ຮັບແສງສະຫວ່າງ. ຕອນນີ້ແມ່ນເວລາທີ່ຟ້າແມບເຫຼື້ອມຈາກທິດຕະເວັນອອກແມບເຫຼື້ອມອອກມາ. ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ເລີ່ມເຮັດພາລະກິດ ແລະ ຍິ່ງໄປກວ່ານັ້ນ ກໍໄດ້ກ່າວໃນຄວາມເປັນພຣະເຈົ້າໂດຍກົງ. ອາດເວົ້າໄດ້ວ່າ ເມື່ອພຣະເຈົ້າເລີ່ມກ່າວເທິງແຜ່ນດິນໂລກ ກໍແມ່ນເມື່ອຟ້າແມບເຫຼື້ອມຈາກທິດຕະເວັນອອກໄດ້ແມບເຫຼື້ອມຂຶ້ນ. ຊັດເຈນກວ່ານັ້ນກໍຄື ເມື່ອນໍ້າແຫ່ງມີຊີວິດໄຫຼຈາກບັນລັງ, ເມື່ອພຣະວັດຈະນະຈາກບັນລັງໄດ້ເລີ່ມຂຶ້ນ ແມ່ນເວລາທີ່ພຣະວັດຈະນະຂອງພຣະວິນຍານທັງເຈັດໄດ້ເລີ່ມຂຶ້ນຢ່າງເປັນທາງການ. ໃນເວລານີ້, ຟ້າແມບເຫຼື້ອມຈາກທິດຕະເວັນອອກໄດ້ເລີ່ມຂຶ້ນ ແລະ ຍ້ອນໄລຍະເວລາຂອງມັນ ລະດັບຂອງການເຍືອງແສງຈຶ່ງແຕກຕ່າງກັນ ແລະ ຍັງມີຂໍ້ຈຳກັດຕໍ່ຂອບເຂດໃນແສງສະຫວ່າງຂອງມັນອີກດ້ວຍ. ແຕ່ດ້ວຍການເຄື່ອນໄຫວຂອງພາລະກິດຂອງພຣະເຈົ້າ, ດ້ວຍການປ່ຽນແປງໃນແຜນການຂອງພຣະອົງ ນັ້ນກໍຄື ດ້ວຍຄວາມແຕກຕ່າງໃນພາລະກິດທີ່ມີຕໍ່ບຸດຊາຍ ແລະ

ປະຊາຊົນຂອງພຣະເຈົ້າ, ຟ້າແມບເຫຼື້ອມຈຶ່ງໄດ້ປະຕິບັດໜ້າທີ່ໂດຍທຳມະຊາດຂອງມັນເພີ່ມຂຶ້ນ ໂດຍເຍືອງແສງທົ່ວຈັກກະວານຈົນບໍ່ມີສິ່ງເປິເປື້ອນ ຫຼື ຂີ້ເຫຍື້ອເຫຼືອຢູ່. ນີ້ແມ່ນແກ້ວຜະລຶກແຫ່ງແຜນການຄຸ້ມຄອງ 6.000 ປີຂອງພຣະເຈົ້າ ແລະ ຄືໝາກຜົນທີ່ພຣະເຈົ້າຊື່ນຊົມ. "ດວງດາວ" ບໍ່ໄດ້ໝາຍເຖິງດວງດາວໃນທ້ອງຟ້າ ແຕ່ໝາຍເຖິງບຸດຊາຍ ແລະ ປະຊາຊົນທັງໝົດຂອງພຣະເຈົ້າທີ່ປະຕິບັດພາລະກິດເພື່ອພຣະອົງ. ຍ້ອນພວກເຂົາເປັນພະຍານໃຫ້ແກ່ພຣະເຈົ້າໃນອານາຈັກຂອງພຣະເຈົ້າ ແລະ ເປັນຕົວແທນໃຫ້ກັບພຣະອົງໃນອານາຈັກຂອງພຣະອົງ ແລະ ຍ້ອນພວກເຂົາແມ່ນສິ່ງຊົງສ້າງ ພວກເຂົາຈຶ່ງຖືກເອີ້ນວ່າ "ດວງດາວ". "ການປ່ຽນແປງ" ໝາຍເຖິງການປ່ຽນແປງຕົວຕົນ ແລະ ສະຖານະ: ຜູ້ຄົນປ່ຽນຈາກຜູ້ຄົນທີ່ຢູ່ເທິງແຜ່ນດິນໂລກໄປເປັນຜູ້ຄົນຂອງອານາຈັກ ແລະ ຍິ່ງໄປກວ່ານັ້ນ ພຣະເຈົ້າແມ່ນຢູ່ນຳພວກເຂົາ ແລະ ລັດສະໝີຂອງພຣະເຈົ້າກໍຢູ່ໃນພວກເຂົາ. ດ້ວຍເຫດນັ້ນ, ພວກເຂົາຈຶ່ງຖືອຳນາດສູງສຸດແທນພຣະເຈົ້າ ແລະ ພິດ ແລະ ຄວາມບໍ່ບໍລິສຸດໃນພວກເຂົາກໍຖືກພາລະກິດຂອງພຣະເຈົ້າຊຳລະລ້າງ ເຊິ່ງໃນທີ່ສຸດ ກໍເຮັດໃຫ້ພວກເຂົາເໝາະສົມທີ່ຈະໃຫ້ພຣະເຈົ້ານຳໃຊ້ ແລະ ເປັນໄປຕາມຫົວໃຈຂອງພຣະເຈົ້າ. ນີ້ແມ່ນດ້ານໜຶ່ງຂອງຄວາມໝາຍຂອງພຣະທຳເຫຼົ່ານີ້. ເມື່ອແສງຈາກພຣະເຈົ້າໄດ້ເຍືອງແສງໃສ່ດິນແດນທັງໝົດ, ທຸກສິ່ງໃນສະຫວັນ ແລະ ແຜ່ນດິນໂລກຈະປ່ຽນແປງໃນລະດັບທີ່ແຕກຕ່າງກັນ ແລະ ດວງດາວໃນທ້ອງຟ້າກໍຈະປ່ຽນແປງເຊັ່ນກັນ, ດວງຕາເວັນ ແລະ ດວງເດືອນຈະຖືກສ້າງຂຶ້ນໃໝ່ ແລະ ຫຼັງຈາກນັ້ນ ຜູ້ຄົນເທິງແຜ່ນດິນໂລກກໍຈະຖືກສ້າງຂຶ້ນໃໝ່ ເຊິ່ງນີ້ຄືພາລະກິດຂອງພຣະເຈົ້າລະຫວ່າງສະຫວັນ ແລະ ແຜ່ນດິນໂລກ ແລະ ບໍ່ແມ່ນເລື່ອງແປກໃຈເລີຍ.

ເມື່ອພຣະເຈົ້າຊ່ວຍຜູ້ຄົນໃຫ້ລອດພົ້ນ, ນີ້ບໍ່ໄດ້ໝາຍເຖິງຜູ້ທີ່ບໍ່ໄດ້ຖືກເລືອກໂດຍທຳມະຊາດ ແຕ່ນີ້ແມ່ນພຽງເປັນເວລາທີ່ພຣະເຈົ້າຊຳລະລ້າງ ແລະ ພິພາກສາຜູ້ຄົນ ແລະ ທຸກຄົນຈະຮ້ອງໄຫ້ຢ່າງຂົມຂື່ນ ຫຼື ນອນໂສກເສົ້າເສຍໃຈຢູ່ເທິງຕຽງຂອງພວກເຂົາ ຫຼື ຖືກໂຈມຕີ ແລະ ໂຍນລົງສູ່ນະຮົກແຫ່ງຄວາມຕາຍຍ້ອນພຣະທຳຂອງພຣະເຈົ້າ. ຕ້ອງຂອບໃຈພຣະວັດຈະນະຂອງພຣະເຈົ້າທີ່ຜູ້ຄົນເລີ່ມຮູ້ຈັກຕົວເອງ. ຖ້າສິ່ງຕ່າງໆບໍ່ເປັນເຊັ່ນນັ້ນ ຕາຂອງພວກເຂົາກໍຈະເປັນຕາຂອງຄັນຄາກ ໄດ້ແຕ່ເບິ່ງຂຶ້ນເທິງ, ບໍ່ມີຜູ້ໃດເຊື່ອ, ບໍ່ມີຜູ້ໃດຮູ້ຈັກຕົວເອງ ແລະ ບໍ່ຮູ້ວ່າຕົວເອງມີນໍ້າໜັກສໍ່າກ້ອນຫີນຈັກກ້ອນ. ຜູ້ຄົນແມ່ນຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮຸນແຮງແທ້ໆ. ມັນແມ່ນຍ້ອນອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າແທ້ຈິງທີ່ໃບໜ້າຂີ້ຮ້າຍຂອງມະນຸດຖືກບັນຍາຍໃນລາຍລະອຽດຢ່າງຊັດເຈນ ເຊິ່ງຫຼັງຈາກທີ່ໄດ້ອ່ານມັນ ກໍເຮັດໃຫ້ມະນຸດປຽບທຽບມັນກັບໃບໜ້າທີ່ແທ້ຈິງຂອງຕົວເອງ. ທຸກຄົນຮູ້ວ່າ ພຣະເຈົ້າຄືຈະຮູ້ຢ່າງຊັດເຈນທີ່ສຸດວ່າ ພວກເຂົາມີເສັ້ນສະໝອງຫຼາຍສໍ່າໃດໃນຫົວຂອງພວກເຂົາ, ສຳລັບຄວາມຮູ້ຂອງພຣະອົງ ກ່ຽວກັບໃບໜ້າອັນຂີ້ຮ້າຍ ແລະ ຄວາມຄິດເລິກສຸດຂອງພວກເຂົານັ້ນແມ່ນບໍ່ຕ້ອງເວົ້າເຖິງເລີຍ. ໃນພຣະທຳທີ່ວ່າ: "ມັນຄືກັບວ່າ ເຜົ່າພັນມະນຸດທັງໝົດຖືກຈັດແຈງ. ພາຍໃຕ້ການເຮືອງແສງສະຫວ່າງນີ້ຈາກທິດຕາເວັນອອກ, ມະນຸດທຸກຄົນຖືກເປີດເຜີຍຮູບຮ່າງທີ່ແທ້ຈິງຂອງພວກເຂົາ, ຕາຂອງພວກເຂົາມືດມົວ ໂດຍບໍ່ແນ່ໃຈວ່າຈະເຮັດແນວໃດ", ສາມາດເຫັນໄດ້ວ່າ ໃນມື້ໜຶ່ງ ເມື່ອພາລະກິດຂອງພຣະເຈົ້າສິ້ນສຸດລົງ ມະນຸດຊາດທັງໝົດກໍຈະຖືກພຣະເຈົ້າພິພາກສາ. ບໍ່ມີຜູ້ໃດສາມາດ

ໜີພົ້ນໄດ້; ພຣະເຈົ້າຈະຈັດການຜູ້ຄົນແຕ່ລະຄົນໃນບັນດາມະນຸດທັງໝົດ ໂດຍຈະບໍ່ເບິ່ງຂ້າມພວກເຂົາ ແມ່ນແຕ່ໜຶ່ງຄົນ ແລະ ດ້ວຍເຫດນັ້ນເທົ່ານັ້ນ ຫົວໃຈຂອງພຣະເຈົ້າຈຶ່ງຈະພໍໃຈ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ: "ພວກເຂົາຍັງຄືກັບສັດທີ່ແລ່ນໜີຈາກແສງສະຫວ່າງຂອງເຮົາ ແລະ ໄປລີ້ໄພຢູ່ໃນຖໍ້າເທິງພູເຂົາ ແຕ່ບໍ່ມີຜູ້ໃດໃນບັນດາພວກເຂົາສາມາດຫຼົບໜີຈາກແສງສະຫວ່າງຂອງເຮົາໄດ້". ຜູ້ຄົນແມ່ນສັດຊັ້ນຕໍ່າ ແລະ ຕໍ່າຕ້ອຍ. ການດຳລົງຊີວິດຢູ່ໃນກຳມືຂອງຊາຕານ, ມັນຄືກັບວ່າ ພວກເຂົາລີ້ໄພໃນປ່າບູຮານເລິກພາຍໃນພູເຂົາ ແຕ່ຍ້ອນບໍ່ມີສິ່ງໃດສາມາດຫຼົບໜີຈາກການເຜົາໄໝ້ໃນແປວໄຟຂອງພຣະເຈົ້າໄດ້, ແມ່ນແຕ່ພາຍໃຕ້ "ການປົກປ້ອງ" ຂອງກອງກຳລັງຂອງຊາຕານ ພວກເຂົາຈະຖືກລືມໂດຍພຣະເຈົ້າໄດ້ແນວໃດ? ເມື່ອຜູ້ຄົນຍອມຮັບການມາຂອງພຣະທຳຂອງພຣະເຈົ້າ, ຮູບຮ່າງທີ່ແປກປະລາດຕ່າງໆ ແລະ ສະພາບທີ່ຂີ້ຮ້າຍຂອງທຸກຄົນກໍຈະຖືກພັນລະນາໂດຍປາກກາຂອງພຣະເຈົ້າ; ພຣະເຈົ້າເວົ້າຢ່າງເໝາະສົມຕາມຄວາມຕ້ອງການ ແລະ ຄວາມຄິດຂອງມະນຸດ. ສະນັ້ນ, ສຳລັບຜູ້ຄົນແລ້ວ ພຣະເຈົ້າປາກົດວ່າຊ່ຽວຊານໃນຈິດຕະວິທະຍາ. ມັນຄືກັບວ່າ ພຣະເຈົ້າແມ່ນນັກຈິດຕະສາດ ແລະ ນອກນັ້ນ ກໍຍັງຄືກັບວ່າ ພຣະເຈົ້າແມ່ນຜູ້ຊ່ຽວຊານດ້ານແພດພາຍໃນ. ບໍ່ແປກເລີຍທີ່ພຣະອົງມີຄວາມເຂົ້າໃຈດັ່ງກ່າວຕໍ່ມະນຸດ ຜູ້ທີ່ "ຊັບຊ້ອນ". ຍິ່ງຜູ້ຄົນຄິດເຊັ່ນນັ້ນ ຄວາມຮູ້ສຶກຂອງພວກເຂົາກ່ຽວກັບຄຸນຄ່າຂອງພຣະເຈົ້າກໍຍິ່ງຫຼາຍຂຶ້ນ ແລະ ພວກເຂົາຍິ່ງຮູ້ສຶກວ່າ ພຣະເຈົ້າເລິກເຊິ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້. ມັນຄືກັບວ່າລະຫວ່າງມະນຸດ ແລະ ພຣະເຈົ້າແມ່ນມີຂອບເຂດແຫ່ງສະຫວັນທີ່ບໍ່ສາມາດຂ້າມຜ່ານໄດ້ ແລະ ຄືກັບວ່າ ທັງສອງໄດ້ແຕ່ຈ້ອງເບິ່ງກັນຢູ່ຄົນລະຝັ່ງຂອງແມ່ນໍ້າຊູ[ກ], ທັງສອງບໍ່ສາມາດເຮັດຫຍັງໄດ້ນອກຈາກແນມເບິ່ງກັນ. ນີ້ເວົ້າໄດ້ວ່າ ຜູ້ຄົນຢູ່ເທິງແຜ່ນດິນໂລກມີແຕ່ເບິ່ງພຣະເຈົ້າດ້ວຍຕາຂອງພວກເຂົາເທົ່ານັ້ນ; ພວກເຂົາບໍ່ເຄີຍມີໂອກາດໃນການສຶກສາພຣະອົງຢ່າງໃກ້ຊິດ ແລະ ສິ່ງດຽວທີ່ພວກເຂົາມີແມ່ນຄວາມຮູ້ສຶກຕິດພັນກັບພຣະອົງ. ໃນໃຈຂອງພວກເຂົາຈະມີຄວາມຮູ້ສຶກຕະຫຼອດວ່າ ພຣະເຈົ້າໜ້າຮັກ ແຕ່ຍ້ອນພຣະເຈົ້າ "ບໍ່ມີຫົວໃຈ ແລະ ບໍ່ມີຄວາມຮູ້ສຶກ" ຫຼາຍ ພວກເຂົາຈຶ່ງບໍ່ເຄີຍມີໂອກາດເວົ້າກ່ຽວກັບຄວາມທຸກທໍລະມານໃນໃຈຂອງພວກເຂົາຢູ່ຕໍ່ໜ້າພຣະອົງ. ພວກເຂົາຄືກັບເມຍສາວທີ່ສວຍງາມທີ່ຢູ່ຕໍ່ໜ້າຜົວທີ່ບໍ່ເຄີຍມີໂອກາດເປີດເຜີຍຄວາມຮູ້ສຶກທີ່ແທ້ຈິງຂອງນາງ ເນື່ອງຈາກຄວາມຊື່ສັດຂອງຜົວຂອງນາງ. ພວກເຂົາແມ່ນຄົນທີ່ເປັນຕາເວດທະນາທີ່ກຽດຊັງຕົວເອງ ແລະ ຍ້ອນຄວາມອ່ອນແອຂອງພວກເຂົາ, ຍ້ອນຄວາມບໍ່ເຄົາລົບຕົວເອງຂອງພວກເຂົາ, ຄວາມກຽດຊັງຂອງເຮົາທີ່ມີຕໍ່ມະນຸດຈຶ່ງເພີ່ມຂຶ້ນໂດຍບໍ່ຮູ້ຕົວ, ຂ້ອນຂ້າງຮຸນແຮງຂຶ້ນ ແລະ ຄວາມໂກດຮ້າຍໃນໃຈຂອງເຮົາກໍລະເບີດອອກມາ. ໃນຈິດໃຈຂອງເຮົາ ມັນເປັນຄືກັບວ່າ ເຮົາໄດ້ທົນທຸກກັບຄວາມເຈັບປວດທີ່ສຸດ. ເຮົາໄດ້ສູນເສຍຄວາມຫວັງໃນຕົວມະນຸດແຕ່ດົນນານແລ້ວ ແຕ່ຍ້ອນວ່າ: "ມື້ຂອງເຮົາໄດ້ເຂົ້າມາໃກ້ມະນຸດທຸກຄົນອີກຄັ້ງ, ມັນໄດ້ປຸກເຜົ່າພັນມະນຸດໃຫ້ຕື່ນອີກຄັ້ງ ໂດຍມອບການເລີ່ມຕົ້ນໃໝ່ໃຫ້ແກ່ມະນຸດຊາດ" ອີກຄັ້ງທີ່ເຮົາໄດ້ຮວບຮວມຄວາມກ້າ ເພື່ອເອົາຊະນະມະນຸດທຸກຄົນ, ເພື່ອຈັບກຸມ ແລະ ເອົາຊະນະ

ກ "ແມ່ນໍ້າຊູ" ໝາຍເຖິງການປຽບທຽບເຂດແດນລະຫວ່າງອຳນາດກົງກັນຂ້າມ.

ມັງກອນແດງທີ່ຍິ່ງໃຫຍ່. ເຈດຕະນາດັ່ງເດີມຂອງພຣະເຈົ້າແມ່ນມີດັ່ງນີ້: ບໍ່ເຮັດຫຍັງຫຼາຍນອກຈາກເອົາຊະນະລູກຫຼານຂອງມັງກອນແດງທີ່ຍິ່ງໃຫຍ່ໃນປະເທດຈີນ; ມີພຽງສິ່ງນີ້ເທົ່ານັ້ນທີ່ຈະຖືໄດ້ວ່າເປັນການເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ ນັ້ນກໍຄືການດັບສູນຂອງມັງກອນແດງທີ່ຍິ່ງໃຫຍ່. ມີແຕ່ສິ່ງນີ້ເທົ່ານັ້ນທີ່ຈະພຽງພໍໃນການພິສູດວ່າ ພຣະເຈົ້າປົກຄອງເປັນກະສັດທົ່ວແຜ່ນດິນໂລກ, ເປັນການພິສູດເຖິງຄວາມສຳເລັດໃນກິດຈະການອັນຍິ່ງໃຫຍ່ຂອງພຣະເຈົ້າ, ພິສູດວ່າ ພຣະເຈົ້າໄດ້ມີການເລີ່ມຕົ້ນໃໝ່ຢູ່ເທິງແຜ່ນດິນໂລກ ແລະ ໄດ້ຮັບສະຫງ່າລາສີຢູ່ເທິງແຜ່ນດິນໂລກ. ຍ້ອນພາບສຸດທ້າຍທີ່ງົດງາມ ພຣະເຈົ້າຈຶ່ງບໍ່ສາມາດຊ່ວຍໄດ້ ນອກຈາກສະແດງຄວາມຫຼົງໄຫຼໃນໃຈຂອງພຣະອົງວ່າ: "ຫົວໃຈຂອງເຮົາເຕັ້ນ ແລະ ພູເຂົາກໍໂດດຂຶ້ນເຕັ້ນດ້ວຍຄວາມດີໃຈຕາມຈັງວະເຕັ້ນຂອງຫົວໃຈຂອງເຮົາ, ແມ່ນໍ້າເຕັ້ນລຳດ້ວຍຄວາມດີໃຈ ແລະ ຄື້ນທະເລກໍຟັດເຟືອນໃສ່ໂງ່ນຫີນ. ມັນຍາກທີ່ຈະອະທິບາຍເຖິງສິ່ງທີ່ຢູ່ໃນໃຈຂອງເຮົາ". ຈາກສິ່ງນີ້ສາມາດເຫັນໄດ້ວ່າ ສິ່ງທີ່ ພຣະເຈົ້າວາງແຜນໄວ້ ພຣະອົງໄດ້ເຮັດສຳເລັດແລ້ວ; ມັນຖືກກຳນົດລ່ວງໜ້າໂດຍພຣະເຈົ້າ ແລະ ມັນແມ່ນສິ່ງທີ່ພຣະເຈົ້າເຮັດໃຫ້ຜູ້ຄົນປະສົບ ແລະ ເຫັນຢ່າງແທ້ຈິງ. ຄວາມຫວັງຂອງອານາຈັກແມ່ນສວຍງາມ; ກະສັດຂອງອານາຈັກແມ່ນຜູ້ໄດ້ຮັບໄຊຊະນະ, ບໍ່ເຄີຍມີຮ່ອງຮອຍຂອງເນື້ອໜັງ ຫຼື ເລືອດ, ມີອົງປະກອບຂອງຄວາມເປັນພຣະເຈົ້າທັງໝົດນັບແຕ່ຫົວຮອດຕີນຂອງພຣະອົງ. ຮ່າງກາຍທັງໝົດຂອງພຣະອົງເຮືອງແສງດ້ວຍລັດສະໝີທີ່ສັກສິດ ເຊິ່ງບໍ່ມີມົນທິນຈາກແນວຄິດຂອງມະນຸດທັງສິ້ນ; ຮ່າງກາຍທັງໝົດຂອງພຣະອົງນັບແຕ່ສ່ວນເທິງຮອດລຸ່ມແມ່ນເຕັມໄປດ້ວຍຄວາມຊອບທຳ ແລະ ກິ່ນອາຍຂອງສະຫວັນ ທີ່ປ່ອຍກິ່ນຫອມອອກມາຢ່າງໜ້າຈັບໃຈ. ດັ່ງສຽງເພງຂອງເພງແຫ່ງຄວາມຮັກ, ພຣະອົງແມ່ນງົດງາມຫຼາຍກວ່າໄພ່ພົນທັງໝົດ ແລະ ສູງສົ່ງກວ່າໄພ່ພົນບູຮານ; ພຣະອົງແມ່ນຕົວຢ່າງໃນທ່າມກາງທຸກຄົນ ແລະ ບໍ່ສາມາດປຽບທຽບກັບມະນຸດໄດ້; ຜູ້ຄົນແມ່ນບໍ່ຄູ່ຄວນທີ່ຈະຫຼຽວເບິ່ງພຣະອົງໂດຍກົງ. ບໍ່ມີຜູ້ໃດສາມາດໄດ້ຮັບໃບໜ້າອັນສະຫງ່າງາມຂອງພຣະເຈົ້າ, ລັກສະນະຂອງພຣະເຈົ້າ ຫຼື ພາບລັກຂອງພຣະເຈົ້າ; ບໍ່ມີຜູ້ໃດສາມາດແຂ່ງຂັນກັບສິ່ງເຫຼົ່ານັ້ນໄດ້ ແລະ ບໍ່ມີຜູ້ໃດສາມາດສັນລະເສີນສິ່ງເຫຼົ່ານັ້ນຢ່າງງ່າຍດາຍດ້ວຍປາກຂອງພວກເຂົາໄດ້.

ພຣະທຳຂອງພຣະເຈົ້າບໍ່ມີສິ້ນສຸດ ຄືກັບນໍ້າທີ່ພຸ່ງອອກຈາກນໍ້າພຸ, ພຣະທຳບໍ່ເຄີຍແຫ້ງ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ມີໃຜສາມາດຢັ່ງເຖິງຄວາມລຶກລັບຂອງແຜນການຄຸ້ມຄອງຂອງພຣະເຈົ້າ. ແຕ່ສຳລັບພຣະເຈົ້າແລ້ວ ຄວາມລຶກລັບດັ່ງກ່າວແມ່ນບໍ່ມີວັນສິ້ນສຸດ. ພຣະເຈົ້າໄດ້ກ່າວຫຼາຍຄັ້ງກ່ຽວກັບການສ້າງຄືນໃໝ່ຂອງພຣະອົງ ແລະ ກ່າວເຖິງການປ່ຽນແປງທົ່ວຈັກກະວານ ໂດຍໃຊ້ວິທີການ ແລະ ພາສາທີ່ແຕກຕ່າງກັນໃນແຕ່ລະຄັ້ງທີ່ເລິກເຊິ່ງກວ່າຄັ້ງຜ່ານມາ: "ເຮົາຕ້ອງການເຮັດໃຫ້ສິ່ງທີ່ສົກກະປົກຖືກເຜົາໄໝ້ເປັນຂີ້ເທົ່າພາຍໃຕ້ສາຍຕາຂອງເຮົາ; ເຮົາຕ້ອງການເຮັດໃຫ້ບຸດຊາຍທີ່ບໍ່ເຊື່ອຟັງທຸກຄົນຫາຍໄປຈາກສາຍຕາຂອງເຮົາ ໂດຍບໍ່ມີວັນລັງເລໃນການມີຊີວິດຢູ່ອີກ". ເປັນຫຍັງພຣະເຈົ້າຈຶ່ງເວົ້າສິ່ງດັ່ງກ່າວຊໍ້າແລ້ວຊໍ້າອີກ? ພຣະອົງບໍ່ຢ້ານວ່າ ຜູ້ຄົນຈະເບື່ອສິ່ງເຫຼົ່ານັ້ນບໍ? ຜູ້ຄົນພຽງແຕ່ງົມຫາໃນທ່າມກາງພຣະທຳຂອງພຣະເຈົ້າ ໂດຍປາດຖະໜາທີ່ຈະຮູ້ຈັກພຣະເຈົ້າດ້ວຍວິທີນີ້ ແຕ່ບໍ່ເຄີຍຈື່ຈຳທີ່ຈະກວດ

ສອບຕົວເອງ. ສະນັ້ນ, ພຣະເຈົ້າຈຶ່ງໃຊ້ວິທີການນີ້ເພື່ອເຕືອນພວກເຂົາ, ເພື່ອເຮັດໃຫ້ພວກເຂົາຮູ້ຈັກຕົວເອງ, ເພື່ອວ່າ ຈາກພວກເຂົາເອງ ພວກເຂົາອາດຈະຮູ້ຈັກຄວາມບໍ່ເຊື່ອຟັງຂອງມະນຸດ ແລະ ດ້ວຍເຫດນັ້ນ ກໍຈະລຶບລ້າງຄວາມບໍ່ເຊື່ອຟັງຂອງພວກເຂົາຢູ່ຕໍ່ໜ້າພຣະເຈົ້າ. ເມື່ອອ່ານວ່າ ພຣະເຈົ້າປາດຖະໜາທີ່ຈະ "ຈັດແຈງ", ທ່າທີຂອງຜູ້ຄົນກໍເລີ່ມກະວົນກະວາຍທັນທີ ແລະ ເບິ່ງຄືວ່າ ກ້າມຊີ້ນຂອງພວກເຂົາກໍຢຸດເໜັງຕີງເຊັ່ນກັນ. ພວກເຂົາກັບຄືນມາຢູ່ຕໍ່ໜ້າພຣະເຈົ້າທັນທີ ເພື່ອວິຈານຕົວເອງ ແລະ ເພື່ອມາຮູ້ຈັກພຣະເຈົ້າ. ຫຼັງຈາກນີ້, ຫຼັງຈາກທີ່ພວກເຂົາໄດ້ຕັດສິນໃຈແລ້ວ ພຣະເຈົ້າກໍໃຊ້ໂອກາດນີ້ເພື່ອສະແດງໃຫ້ພວກເຂົາເຫັນທາດແທ້ຂອງມັງກອນແດງທີ່ຍິ່ງໃຫຍ່; ສະນັ້ນ, ຜູ້ຄົນຈຶ່ງພົວພັນກັບໂລກແຫ່ງວິນຍານໂດຍກົງ ແລະ ຍ້ອນຄວາມຕັດສິນໃຈຂອງພວກເຂົາໄດ້ຫຼິ້ນບົດບາດແລ້ວຈິດໃຈຂອງພວກເຂົາກໍເລີ່ມຫຼິ້ນບົດບາດເຊັ່ນກັນ ເຊິ່ງເພີ່ມທັດສະນະຄະຕິລະຫວ່າງມະນຸດ ແລະພຣະເຈົ້າ, ສິ່ງນີ້ເປັນປະໂຫຍດຫຼາຍຕໍ່ພາລະກິດຂອງພຣະເຈົ້າໃນເບື້ອງໜັງ. ດ້ວຍວິທີນີ້, ຜູ້ຄົນຈຶ່ງມີທ່າທີຍຶດຕິດກັບອະດີດໂດຍບໍ່ຮູ້ຕົວ: ໃນອະດີດ ຜູ້ຄົນເຊື່ອໃນພຣະເຈົ້າທີ່ເລື່ອນລອຍເປັນເວລາຫຼາຍປີ; ພວກເຂົາບໍ່ເຄີຍເປັນອິດສະຫຼະໃນໃຈຂອງພວກເຂົາເປັນເວລາຫຼາຍປີ, ບໍ່ສາມາດມີຄວາມສຸກຢ່າງໃຫຍ່ຫຼວງໄດ້ ແລະ ເຖິງແມ່ນວ່າ ພວກເຂົາເຊື່ອໃນພຣະເຈົ້າ ແຕ່ກໍບໍ່ມີຄວາມເປັນລະບຽບໃນຊີວິດຂອງພວກເຂົາ. ມັນເບິ່ງຄືກັບວ່າ ທຸກສິ່ງແມ່ນຄືເກົ່າເໝືອນກັບກ່ອນທີ່ຈະມີຄວາມເຊື່ອ. ຊີວິດຂອງພວກເຂົາຮູ້ສຶກເປົ່າວ່າງ ແລະ ໝົດຫວັງ ແລະ ເບິ່ງຄືວ່າ ຄວາມເຊື່ອຂອງພວກເຂົາໃນເວລານັ້ນແມ່ນມີຄວາມຫຍຸ້ງຍາກໃດໜຶ່ງ ທີ່ບໍ່ດີໄປກວ່າການບໍ່ມີຄວາມເຊື່ອ. ນັບແຕ່ພວກເຂົາໄດ້ເຫັນພຣະເຈົ້າທີ່ແທ້ຈິງຂອງປັດຈຸບັນ, ມັນກໍເປັນຄືກັບວ່າ ສະຫວັນ ແລະ ແຜ່ນດິນໂລກໄດ້ຖືກສ້າງຂຶ້ນຄືນໃໝ່; ຊີວິດຂອງພວກເຂົາແຈ່ມໃສ, ພວກເຂົາບໍ່ໄດ້ໝົດຫວັງອີກຕໍ່ໄປ ແລະ ຍ້ອນການມາຮອດຂອງພຣະເຈົ້າທີ່ແທ້ຈິງພວກເຂົາຈຶ່ງຮູ້ສຶກໝັ້ນຄົງໃນໃຈຂອງພວກເຂົາ ແລະ ມີຄວາມ ສະຫງົບພາຍໃນຈິດໃຈຂອງພວກເຂົາ. ພວກເຂົາບໍ່ໄລ່ສາຍລົມ ແລະ ຄວ້າໃສ່ເງົາໃນທຸກສິ່ງທີ່ພວກເຂົາເຮັດອີກຕໍ່ໄປ; ພວກເຂົາຈະບໍ່ສະແຫວງຫາຢ່າງບໍ່ມີເປົ້າໝາຍອີກຕໍ່ໄປ ແລະ ພວກເຂົາຈະບໍ່ໄກວໄປມາອີກຕໍ່ໄປ. ຊີວິດໃນປັດຈຸບັນແມ່ນຍິ່ງງົດງາມ ແລະ ຜູ້ຄົນໄດ້ເຂົ້າໄປໃນອານາຈັກໂດຍບໍ່ຄາດຄິດມາກ່ອນ ແລະ ໄດ້ກາຍເປັນປະຊາຊົນຂອງພຣະເຈົ້າ ແລະ ຫຼັງຈາກນັ້ນ... ໃນຫົວໃຈຂອງພວກເຂົາ, ຍິ່ງຜູ້ຄົນຄິດກ່ຽວກັບສິ່ງນີ້ຄວາມຫວານກໍຍິ່ງຫຼາຍຂຶ້ນ; ຍິ່ງພວກເຂົາຄິດກ່ຽວກັບສິ່ງນີ້ ພວກເຂົາກໍຍິ່ງມີຄວາມສຸກຫຼາຍຂຶ້ນ ແລະພວກເຂົາຍິ່ງຖືກດົນບັນດານໃຫ້ຮັກພຣະເຈົ້າຫຼາຍຂຶ້ນ. ສະນັ້ນ, ມິດຕະພາບລະຫວ່າງພຣະເຈົ້າ ແລະມະນຸດຈຶ່ງເພີ່ມຍິ່ງຂຶ້ນໂດຍພວກເຂົາບໍ່ຮູ້ຕົວເລີຍ. ຜູ້ຄົນຮັກພຣະເຈົ້າຫຼາຍຂຶ້ນ ແລະ ຮູ້ຈັກພຣະເຈົ້າຫຼາຍຂຶ້ນ ແລະ ພາລະກິດຂອງພຣະເຈົ້າໃນມະນຸດກໍງ່າຍຂຶ້ນ ໂດຍບໍ່ມີການບັງຄັບ ຫຼື ຜັກດັນຜູ້ຄົນອີກຕໍ່ໄປ, ແຕ່ເຮັດຕາມວິທີທາງຂອງທຳມະຊາດ ແລະ ມະນຸດກໍປະຕິບັດຕາມໜ້າທີ່ຂອງເຂົາເອງທີ່ເປັນເອກະລັກ. ດ້ວຍວິທີນີ້ເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດຮູ້ຈັກພຣະເຈົ້າເທື່ອລະໜ້ອຍ. ມີແຕ່ສິ່ງນີ້ເທົ່ານັ້ນທີ່ເປັນສະຕິປັນຍາຂອງພຣະເຈົ້າ. ມັນບໍ່ຈຳເປັນໃຊ້ຄວາມພະຍາຍາມແມ່ນແຕ່ໜ້ອຍ ແລະ ມັນຖືກເຮັດໃຫ້ສຳເລັດອີງຕາມທຳມະຊາດຂອງມະນຸດ. ສະນັ້ນ, ໃນເວລານີ້ ພຣະເຈົ້າໄດ້ເວົ້າວ່າ: "ໃນລະຫວ່າງ

ການບັງເກີດເປັນມະນຸດຂອງເຮົາໃນໂລກມະນຸດ, ພາຍໃຕ້ການຊີ້ນຳຂອງເຮົາ ມະນຸດໄດ້ມາຮອດຍຸກນີ້ໂດຍທີ່ບໍ່ຮູ້ຕົວ ແລະ ໄດ້ຮູ້ຈັກເຮົາໂດຍບໍ່ຮູ້ຕົວ. ແຕ່ສຳລັບວິທີຍ່າງເສັ້ນທາງທີ່ຢູ່ຂ້າງໜ້ານັ້ນບໍ່ມີຜູ້ໃດມີແນວຄິດແມ່ນແຕ່ໜ້ອຍດຽວ ຫຼື ບໍ່ມີຜູ້ໃດຮູ້ເລີຍ ແລະ ແຮງໄກທີ່ຈະມີຜູ້ໃດຮູ້ວ່າ ເສັ້ນທາງນັ້ນຈະພາພວກເຂົາໄປໃນທິດທາງໃດ. ມີພຽງການເຝົ້າເບິ່ງຂອງພຣະອົງຜູ້ຊົງລິດທານຸພາບສູງສຸດເທົ່ານັ້ນພວກເຂົາຈຶ່ງຈະສາມາດຍ່າງຕາມເສັ້ນທາງໄປເຖິງທີ່ສຸດໄດ້; ມີພຽງການຊີ້ນຳໂດຍຟ້າແມບເຫຼື້ອມໃນທິດຕາເວັນອອກເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດຜ່ານທາງເຂົ້າທີ່ນຳໄປສູ່ອານາຈັກຂອງເຮົາໄດ້". ຂ້າງເທິງນີ້ບໍ່ແມ່ນບົດສະຫຼຸບເຖິງສິ່ງທີ່ເຮົາໄດ້ພັນລະນາກ່ຽວກັບໃຈຂອງມະນຸດບໍ? ໃນນີ້ແມ່ນມີຄວາມລັບກ່ຽວກັບພຣະທຳຂອງພຣະເຈົ້າ. ສິ່ງທີ່ມະນຸດຄິດໃນໃຈຂອງເຂົາແມ່ນສິ່ງທີ່ພຣະເຈົ້າເວົ້າຈາກປາກຂອງພຣະອົງຢ່າງແທ້ຈິງ ແລະ ສິ່ງທີ່ພຣະອົງເວົ້າຈາກປາກຂອງພຣະອົງກໍຄືສິ່ງທີ່ມະນຸດປາດຖະໜາ. ນີ້ແມ່ນສິ່ງທີ່ພຣະເຈົ້າຊ່ຽວຊານທີ່ສຸດ ນັ້ນກໍຄືການເປີດເຜີຍໃຈຂອງມະນຸດ; ຖ້າບໍ່ແມ່ນ ແລ້ວທຸກຄົນຈະຖືກເຮັດໃຫ້ເຊື່ອຢ່າງຈິງໃຈໄດ້ແນວໃດ? ນີ້ບໍ່ແມ່ນຜົນທີ່ພຣະເຈົ້າປາດຖະໜາທີ່ຈະບັນລຸ ໃນການເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ບໍ?

ທີ່ຈິງແລ້ວ ມີພຣະທຳຫຼາຍຂໍ້ທີ່ພຣະເຈົ້າບໍ່ມີເຈດຕະນາບອກເຖິງຄວາມໝາຍຜິວເຜີນຂອງພຣະທຳເຫຼົ່ານັ້ນ. ໃນພຣະທຳຫຼາຍຂໍ້ຂອງພຣະອົງ, ພຣະເຈົ້າພຽງແຕ່ເຈດຕະນາຢ່າງພາກພຽນທີ່ຈະປ່ຽນແປງຄວາມຄິດຂອງຜູ້ຄົນ ແລະ ຫັນປ່ຽນຄວາມສົນໃຈຂອງພວກເຂົາ. ພຣະເຈົ້າບໍ່ໄດ້ໃຫ້ຄວາມສຳຄັນຕໍ່ພຣະທຳເຫຼົ່ານີ້ ແລະ ດ້ວຍເຫດນັ້ນ ພຣະທຳຫຼາຍຂໍ້ຈຶ່ງບໍ່ສົມຄວນທີ່ຈະໄດ້ຮັບການອະທິບາຍ. ເມື່ອມະນຸດຖືກພຣະທຳຂອງພຣະເຈົ້າເອົາຊະນະຈົນເຖິງຂັ້ນທີ່ພວກເຂົາເປັນຢູ່ໃນປັດຈຸບັນ, ພະລັງຂອງຜູ້ຄົນກໍໄດ້ໄປເຖິງຈຸດໃດໜຶ່ງແລ້ວ, ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງກ່າວພຣະທຳກ່ຽວກັບການຕັກເຕືອນຫຼາຍຂຶ້ນ ເຊິ່ງເປັນກົດບັນຍັດທີ່ພຣະອົງໄດ້ວາງອອກໃຫ້ແກ່ປະຊາຊົນຂອງພຣະເຈົ້າ: "ເຖິງວ່າ ມະນຸດທີ່ອາໄສຢູ່ໃນແຜ່ນດິນໂລກຈະມີຫຼາຍຄືກັບດວງດາວ ແຕ່ເຮົາກໍຮູ້ພວກເຂົາທຸກຄົນຢ່າງຊັດເຈນຄືກັບຝາມືເຮົາເອງ. ເຖິງວ່າ ມະນຸດທີ່ 'ຮັກ' ເຮົາຈະມີຫຼາຍຈົນນັບບໍ່ຖ້ວນຄືກັບເມັດຊາຍໃນທະເລ ແຕ່ຈະມີບາງຄົນເທົ່ານັ້ນທີ່ຈະຖືກເຮົາເລືອກ: ມີພຽງແຕ່ຜູ້ທີ່ສະແຫວງຫາແສງສະຫວ່າງເທົ່ານັ້ນ ທີ່ຈະຖືກແຍກອອກຈາກຜູ້ທີ່ 'ຮັກ' ເຮົາ". ແນ່ນອນ ມີຫຼາຍຄົນເວົ້າວ່າ ພວກເຂົາຮັກພຣະເຈົ້າ ແຕ່ມີໜ້ອຍຄົນທີ່ຮັກພຣະເຈົ້າໃນຫົວໃຈຂອງພວກເຂົາ. ມັນຈະເບິ່ງຄືກັບວ່າ ສິ່ງນີ້ສາມາດເບິ່ງອອກໄດ້ຢ່າງຊັດເຈນແມ່ນແຕ່ໃນຍາມຫຼັບຕາ. ໂລກທັງໝົດຂອງຜູ້ທີ່ເຊື່ອໃນພຣະເຈົ້າແມ່ນເປັນແນວນີ້ຢ່າງແທ້ຈິງ. ໃນນີ້ພວກເຮົາຈະເຫັນວ່າ ຕອນນີ້ ພຣະເຈົ້າໄດ້ຫັນໄປຫາພາລະກິດຂອງ "ການຈັດແຈງຜູ້ຄົນ" ເຊິ່ງສະແດງໃຫ້ເຫັນສິ່ງທີ່ພຣະເຈົ້າຕ້ອງການ ແລະ ສິ່ງທີ່ເຮັດໃຫ້ພຣະເຈົ້າພໍໃຈ ທີ່ບໍ່ແມ່ນຄຣິສຕະຈັກໃນປັດຈຸບັນ ແຕ່ແມ່ນອານາຈັກຫຼັງຈາກການຈັດແຈງ. ໃນເວລານີ້ ພຣະອົງໃຫ້ຄຳຕັກເຕືອນເພີ່ມເຕີມຕໍ່ "ສິ່ງຂອງທີ່ເປັນອັນຕະລາຍ" ທັງໝົດ: ນອກຈາກວ່າ ພຣະເຈົ້າຈະບໍ່ກະທຳການໃດໆ, ແຕ່ທັນທີໃດທີ່ພຣະເຈົ້າເລີ່ມປະຕິບັດການ ຜູ້ຄົນເຫຼົ່ານີ້ກໍຈະຖືກກວາດລ້າງຈາກອານາຈັກ. ພຣະເຈົ້າບໍ່ເຄີຍເຮັດສິ່ງຕ່າງໆແບບພໍເປັນພິທີ. ພຣະອົງເຮັດຕາມຫຼັກການ "ໜຶ່ງຄືໜຶ່ງ ແລະ ສອງຄືສອງ" ຕະຫຼອດ ແລະ ຖ້າມີຜູ້ທີ່ພຣະອົງບໍ່

ປາດຖະໜາທີ່ຈະຫຼຽວເບິ່ງ ພຣະອົງກໍຈະເຮັດທຸກຢ່າງທີ່ເປັນໄປໄດ້ເພື່ອກວາດລ້າງພວກເຂົາ ເພື່ອຢຸດພວກເຂົາຈາກການສ້າງຄວາມວຸ້ນວາຍໃນອະນາຄົດ. ນີ້ແມ່ນເອີ້ນວ່າ “ການເອົາຂີ້ເຫຍື້ອອອກ ແລະ ເຮັດຄວາມສະອາດຢ່າງທົ່ວເຖິງ”. ທັນທີທີ່ພຣະເຈົ້າປະກາດພຣະດຳລັດແຫ່ງການປົກຄອງຕໍ່ມະນຸດ ແມ່ນເວລາທີ່ພຣະອົງສະແດງການກະທຳທີ່ມະຫັດສະຈັນຂອງພຣະອົງ ແລະ ທຸກສິ່ງທີ່ຢູ່ພາຍໃນພຣະອົງ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າຕໍ່ໄປວ່າ: “ມີສັດຮ້າຍຢ່າງຫຼວງຫຼາຍເທິງພູເຂົາ ແຕ່ພວກມັນທຸກໂຕເຊື່ອຟັງເຮົາຄືດັ່ງໂຕແກະທີ່ຢູ່ຕໍ່ໜ້າເຮົາ; ມີຄວາມລຶກລັບທີ່ຢັ່ງບໍ່ເຖິງນອນຢູ່ກ້ອງຄື້ນທະເລ ແຕ່ພວກມັນສະແດງຕົວເອງຕໍ່ເຮົາຢ່າງຊັດເຈນຄືກັບທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກ; ໃນສະຫວັນເບື້ອງເທິງແມ່ນອານາຈັກທີ່ມະນຸດບໍ່ມີວັນຈະໄປເຖິງ ແຕ່ເຮົາກໍຍ່າງໄປມາຢ່າງອິດສະຫຼະໃນອານາຈັກເຫຼົ່ານັ້ນທີ່ບໍ່ສາມາດເຂົ້າເຖິງໄດ້”. ຄວາມໝາຍຂອງພຣະເຈົ້າຄື: ເຖິງວ່າ ໃຈຂອງມະນຸດຈະຫຼອກລວງເໜືອທຸກສິ່ງ ແລະ ເບິ່ງຄືກັບວ່າຄວາມລຶກລັບທີ່ບໍ່ສິ້ນສຸດເປັນເໝືອນດັ່ງນະຮົກຂອງແນວຄິດຂອງຜູ້ຄົນ ແຕ່ພຣະເຈົ້າກໍຮູ້ຈັກສະພາບທີ່ແທ້ຈິງຂອງມະນຸດຄືດັ່ງຝາມືຂອງພຣະອົງ. ໃນບັນດາທຸກສິ່ງ ມະນຸດແມ່ນສັດທີ່ຮ້າຍກາດ ແລະ ໂຫດຮ້າຍຫຼາຍກວ່າສັດປ່າ ແຕ່ພຣະເຈົ້າກໍໄດ້ເອົາຊະນະມະນຸດ ຈົນຮອດຈຸດທີ່ບໍ່ມີຜູ້ໃດກ້າທີ່ຈະລຸກຮືຂຶ້ນ ແລະ ຕໍ່ຕ້ານ. ຄວາມຈິງແລ້ວ ສິ່ງທີ່ຜູ້ຄົນຄິດໃນໃຈຂອງພວກເຂົາແມ່ນຊັບຊ້ອນຫຼາຍກວ່າທຸກສິ່ງໃນທ່າມກາງສິ່ງທັງປວງຕາມທີ່ພຣະເຈົ້າເຈດຕະນາໄວ້; ບໍ່ສາມາດຢັ່ງເຖິງມັນໄດ້ ແຕ່ພຣະເຈົ້າກໍບໍ່ຄຳນຶງເຖິງໃຈຂອງມະນຸດ. ພຣະອົງພຽງແຕ່ປະຕິບັດກັບມັນຄືໜອນໂຕນ້ອຍໆທີ່ຢູ່ຕໍ່ໜ້າພຣະອົງ. ພຣະອົງເອົາຊະນະມັນດ້ວຍພຣະທຳຈາກປາກຂອງພຣະອົງ; ພຣະອົງໂຈມຕີມັນໃນເວລາໃດກໍໄດ້ຕາມທີ່ພຣະອົງປາດຖະໜາ; ພຣະອົງຂ້ຽນຕີມັນດ້ວຍການແກວ່ງມືຂອງພຣະອົງພຽງເລັກນ້ອຍ; ພຣະອົງປະນາມມັນຕາມໃຈພຣະອົງ.

ໃນປັດຈຸບັນ, ທຸກຄົນແມ່ນມີຊີວິດຢູ່ພາຍໃນຄວາມມືດ ແຕ່ເນື່ອງຈາກການມາຮອດຂອງພຣະເຈົ້າ ໃນທີ່ສຸດ ພວກເຂົາກໍຮູ້ຈັກແກ່ນແທ້ຂອງແສງສະຫວ່າງດ້ວຍການເຫັນພຣະອົງ. ໃນທົ່ວໂລກມັນຄືກັບວ່າ ໝໍ້ດຳໃຫຍ່ຖືກຂວ້ຳປົກເທິງແຜ່ນດິນໂລກ ແລະ ບໍ່ມີຜູ້ໃດສາມາດຫາຍໃຈໄດ້; ພວກເຂົາທຸກຄົນຕ້ອງການພິກປີ້ນສະຖານະການ ແຕ່ກໍບໍ່ມີຜູ້ໃດເຄີຍຍົກໝໍ້ນັ້ນອອກໄດ້. ເປັນຍ້ອນການບັງເກີດເປັນມະນຸດຂອງພຣະເຈົ້າເທົ່ານັ້ນທີ່ໄດ້ເຮັດໃຫ້ຕາຂອງຜູ້ຄົນມືນຂຶ້ນທັນທີ ແລະ ພວກເຂົາກໍໄດ້ເຫັນພຣະເຈົ້າທີ່ແທ້ຈິງ. ສະນັ້ນ, ພຣະເຈົ້າຈຶ່ງຖາມພວກເຂົາດ້ວຍນ້ຳສຽງທີ່ເປັນຄຳຖາມວ່າ: “ມະນຸດບໍ່ເຄີຍຮູ້ຈັກເຮົາໃນແສງສະຫວ່າງ ແຕ່ເຫັນເຮົາໃນໂລກແຫ່ງຄວາມມືດເທົ່ານັ້ນ. ພວກເຈົ້າບໍ່ໄດ້ຢູ່ໃນສະພາບດຽວກັນກັບໃນປັດຈຸບັນບໍ? ມັນແມ່ນໃນຈຸດສູງສຸດຂອງການອາລະວາດຂອງມັງກອນແດງທີ່ຍິ່ງໃຫຍ່ທີ່ເຮົາໄດ້ກາຍມາເປັນເນື້ອໜັງຢ່າງເປັນທາງການເພື່ອປະຕິບັດພາລະກິດຂອງເຮົາ”. ພຣະເຈົ້າບໍ່ເຊື່ອງສະຖານະການຕົວຈິງຂອງໂລກແຫ່ງວິນຍານ ແລະ ພຣະອົງບໍ່ເຊື່ອງສະພາບການຕົວຈິງຂອງຈິດໃຈມະນຸດ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເຕືອນຜູ້ຄົນຊ້ຳແລ້ວຊ້ຳອີກວ່າ: “ເຮົາບໍ່ພຽງແຕ່ເຮັດໃຫ້ປະຊາຊົນຂອງເຮົາສາມາດຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນ ແຕ່ຍັງຊຳລະລ້າງພວກເຂົາອີກດ້ວຍ. ເນື່ອງຈາກຄວາມຮຸນແຮງຂອງພຣະດຳລັດແຫ່ງການປົກຄອງຂອງເຮົາ, ຄົນສ່ວນໃຫຍ່ຈຶ່ງຍັງ

ຢູ່ໃນອັນຕະລາຍຈາກການຖືກເຮົາກຳຈັດ. ນອກຈາກວ່າ ພວກເຈົ້າຈະໃຊ້ຄວາມພະຍາຍາມຢ່າງໜັກເພື່ອຈັດການກັບຕົວເອງ, ເພື່ອເອົາຊະນະຕົວເອງ ເຊິ່ງນອກຈາກວ່າ ພວກເຈົ້າຈະເຮັດສິ່ງນີ້ ພວກເຈົ້າຈະກາຍເປັນສິ່ງທີ່ເຮົາລັງກຽດ ແລະ ປະຕິເສດຢ່າງແນ່ນອນ ໂດຍຈະຖືກຖິ້ມລົງໄປນະຮົກຢ່າງບໍ່ມີທາງໜີພົ້ນໄດ້ ຄືກັບໂປໂລຜູ້ທີ່ໄດ້ຮັບການຂ້ຽນຕີຈາກມືຂອງເຮົາ". ເມື່ອພຣະເຈົ້າກ່າວເພີ່ມຫຼາຍຂຶ້ນ, ຜູ້ຄົນຈຶ່ງໄດ້ລະວັງບາດກ້າວຂອງພວກເຂົາຫຼາຍຂຶ້ນ ແລະ ມີຄວາມຢຳເກງຕໍ່ພຣະດຳລັດແຫ່ງການປົກຄອງຂອງພຣະເຈົ້າຫຼາຍຂຶ້ນ; ພຽງເມື່ອນັ້ນ ອຳນາດຂອງພຣະເຈົ້າຈຶ່ງຈະຖືກເປີດເຜີຍ ແລະ ລິດທານຸພາບຂອງພຣະອົງກໍຈະຖືກເຮັດໃຫ້ແຈ່ມແຈ້ງ. ໃນນີ້ ໄດ້ມີການກ່າວເຖິງໂປໂລອີກຄັ້ງ ເພື່ອວ່າ ຜູ້ຄົນອາດຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າ: ພວກເຂົາຕ້ອງບໍ່ເປັນຜູ້ທີ່ຖືກພຣະເຈົ້າຂ້ຽນຕີ ແຕ່ເປັນຜູ້ທີ່ເອົາໃຈໃສ່ກັບຄວາມປະສົງຂອງພຣະເຈົ້າ. ໃນທ່າມກາງຄວາມຢຳເກງຂອງພວກເຂົາ ມີແຕ່ສິ່ງນີ້ເທົ່ານັ້ນທີ່ສາມາດເຮັດໃຫ້ຜູ້ຄົນເບິ່ງຄືນຫຼັງເຖິງຄວາມບໍ່ສາມາດຂອງການຕັດສິນໃຈຂອງພວກເຂົາເມື່ອຢູ່ຕໍ່ໜ້າພຣະເຈົ້າເພື່ອເຮັດໃຫ້ພຣະອົງພໍໃຈທັງໝົດ, ເຊິ່ງສິ່ງນີ້ເຮັດໃຫ້ພວກເຂົາເສຍໃຈຫຼາຍຍິ່ງຂຶ້ນ ແລະ ມີຄວາມຮູ້ຫຼາຍຍິ່ງຂຶ້ນກ່ຽວກັບພຣະເຈົ້າທີ່ແທ້ຈິງ. ສະນັ້ນ, ພຽງເມື່ອນັ້ນ ພວກເຂົາຈຶ່ງຈະສາມາດບໍ່ສົງໄສກ່ຽວກັບພຣະທຳຂອງພຣະເຈົ້າໄດ້.

"ມະນຸດບໍ່ພຽງແຕ່ຈະບໍ່ຮູ້ຈັກເຮົາໃນເນື້ອໜັງເທົ່ານັ້ນ; ຍິ່ງໄປກວ່ານັ້ນ, ເຂົາບໍ່ສາມາດເຂົ້າໃຈຕົວເອງທີ່ອາໄສຢູ່ໃນຮ່າງກາຍທີ່ເປັນເນື້ອໜັງ. ເປັນເວລາຫຼາຍປີ, ມະນຸດໄດ້ຫຼອກລວງເຮົາ ໂດຍປະຕິບັດກັບເຮົາຄືກັບແຂກພາຍນອກ. ຫຼາຍຄັ້ງ..." ຄຳວ່າ "ຫຼາຍຄັ້ງ" ເຫຼົ່ານີ້ຄືລາຍການຂອງຄວາມເປັນຈິງໃນການຕໍ່ຕ້ານພຣະເຈົ້າຂອງມະນຸດ ເຊິ່ງສະແດງໃຫ້ຜູ້ຄົນເຫັນຕົວຢ່າງທີ່ແທ້ຈິງຂອງການຂ້ຽນຕີ; ສິ່ງນີ້ແມ່ນຫຼັກຖານຂອງຄວາມຜິດບາບ ແລະ ບໍ່ມີຜູ້ໃດສາມາດໂຕ້ແຍ້ງມັນໄດ້ອີກ. ທຸກຄົນໃຊ້ພຣະເຈົ້າຄືເຄື່ອງໃຊ້ປະຈຳວັນ ຄືກັບວ່າ ພຣະອົງແມ່ນເຄື່ອງໃຊ້ຈຳເປັນໃນຄົວເຮືອນ ທີ່ພວກເຂົາໃຊ້ຕາມທີ່ພວກເຂົາຕ້ອງການ. ບໍ່ມີຜູ້ໃດຖະໜອມພຣະເຈົ້າ; ບໍ່ມີຜູ້ໃດພະຍາຍາມຮູ້ຈັກຄວາມງົດງາມຂອງພຣະເຈົ້າ ຫຼື ໃບໜ້າທີ່ສະຫງ່າງາມຂອງພຣະອົງ ແລ້ວແຮງໄກທີ່ຈະມີຜູ້ໃດມີເຈດຕະນາອ່ອນນ້ອມຕໍ່ພຣະອົງ. ບໍ່ມີຜູ້ໃດເຄີຍຫຼຽວເບິ່ງພຣະເຈົ້າຄືສິ່ງທີ່ເປັນທີ່ຮັກໃນໃຈຂອງພວກເຂົາ; ພວກເຂົາທຸກຄົນລາກພຣະອົງອອກເມື່ອພວກເຂົາຕ້ອງການພຣະອົງ ແລະ ໂຍນພຣະອົງຖິ້ມ ແລະ ບໍ່ສົນໃຈພຣະອົງເມື່ອພວກເຂົາບໍ່ຕ້ອງການ. ມັນເປັນຄືກັບວ່າ ສຳລັບມະນຸດແລ້ວ ພຣະເຈົ້າແມ່ນຕຸກກະຕາ ທີ່ມະນຸດສາມາດຄວບຄຸມໄດ້ຕາມໃຈ ແລະ ຮຽກຮ້ອງຫຍັງກໍໄດ້ຕາມທີ່ເຂົາປາດຖະໜາ ຫຼື ຕ້ອງການ. ແຕ່ພຣະເຈົ້າເວົ້າວ່າ: "ໃນໄລຍະຂອງການບັງເກີດເປັນມະນຸດຂອງເຮົາ, ຖ້າເຮົາບໍ່ເຫັນອົກເຫັນໃຈຕໍ່ຄວາມອ່ອນແອຂອງມະນຸດແລ້ວຄວາມເປັນມະນຸດທຸກຄົນກໍຈະຕົກໃຈຈົນເຮັດຫຍັງບໍ່ຖືກຍ້ອນການບັງເກີດເປັນມະນຸດຂອງເຮົາ ແລະ ດ້ວຍເຫດນັ້ນ ກໍຈະຕົກສູ່ແດນມໍລະນາ" ເຊິ່ງສະແດງໃຫ້ເຫັນວ່າ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້ານັ້ນຍິ່ງໃຫຍ່ພຽງໃດ. ພຣະອົງໄດ້ເອົາຊະນະມະນຸດໃນເນື້ອໜັງ ແທນທີ່ຈະທຳລາຍມະນຸດຊາດທັງໝົດຈາກໂລກແຫ່ງວິນຍານ. ສະນັ້ນ, ເມື່ອພຣະທຳກາຍເປັນເນື້ອໜັງ ຈຶ່ງບໍ່ມີຜູ້ໃດຮູ້. ຖ້າພຣະເຈົ້າບໍ່ສົນໃຈຄວາມອ່ອນຂອງມະນຸດ, ຖ້າສະຫວັນ ແລະ ແຜ່ນດິນໂລກຖືກປີ້ນກັບ

ດ້ານເມື່ອພຣະອົງກາຍເປັນເນື້ອໜັງ, ທຸກຄົນກໍຈະຖືກທຳລາຍ. ຍ້ອນມັນຢູ່ໃນທຳມະຊາດຂອງຜູ້ຄົນທີ່ຈະມັກສິ່ງໃໝ່ ແລະ ກຽດຊັງສິ່ງເກົ່າ ແລະ ພວກເຂົາມັກຈະລືມເວລາທີ່ບໍ່ດີເມື່ອສິ່ງຕ່າງໆດຳເນີນໄປໄດ້ດີ ແລະ ບໍ່ມີຜູ້ໃດໃນບັນດາພວກເຂົາຮູ້ວ່າ ພວກເຂົາມີຄວາມສຸກສໍ່າໃດ. ພຣະເຈົ້າໄດ້ເຕືອນພວກເຂົາຊໍ້າແລ້ວຊໍ້າອີກວ່າ ພວກເຂົາຕ້ອງເຫັນຄຸນຄ່າໃນປັດຈຸບັນທີ່ໄດ້ມາດ້ວຍຄວາມຍາກລຳບາກ; ເພື່ອຜົນປະໂຫຍດໃນອະນາຄົດ ພວກເຂົາຕ້ອງຖືເອົາປັດຈຸບັນເປັນສິ່ງທີ່ມີຄ່າຫຼາຍທີ່ສຸດ ແລະ ບໍ່ຕ້ອງປີນຂຶ້ນສູງຄືກັບສັດໂດຍບໍ່ຮູ້ວ່າໃຜຄືນາຍຂອງມັນ ແລະ ບໍ່ໃຫ້ເມີນເສີຍຕໍ່ພອນທີ່ຢູ່ໃນທ່າມກາງການດຳລົງຊີວິດຂອງພວກເຂົາ. ສະນັ້ນ, ຜູ້ຄົນຈຶ່ງປະພຶດຕົນເປັນຄົນດີໂດຍບໍ່ໂອ້ອວດ ແລະ ອວດດີອີກຕໍ່ໄປ ແລະ ພວກເຂົາໄດ້ມາຮູ້ຈັກວ່າ ນີ້ທຳມະຊາດຂອງມະນຸດນັ້ນບໍ່ດີ ແຕ່ດ້ວຍຄວາມເມດຕາ ແລະ ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດ; ພວກເຂົາທຸກຄົນຈຶ່ງຢ້ານການຂ້ຽນຕີ ແລະ ດ້ວຍເຫດນັ້ນຈຶ່ງບໍ່ກ້າເຮັດຫຍັງອີກ.

# ບົດທີ 13

ພຣະເຈົ້າກຽດຊັງລູກຫຼານທັງໝົດຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ພຣະອົງຍິ່ງຊັງມັງກອນແດງທີ່ຍິ່ງໃຫຍ່ຫຼາຍກວ່າ: ນີ້ແມ່ນແຫຼ່ງທີ່ມາຂອງຄວາມໂກດຮ້າຍພາຍໃນໃຈຂອງພຣະເຈົ້າ. ເບິ່ງຄືກັບວ່າ ພຣະເຈົ້າປາດຖະໜາທີ່ຈະໂຍນທຸກສິ່ງ ທີ່ເປັນຂອງມັງກອນແດງທີ່ຍິ່ງໃຫຍ່ລົງສູ່ທະເລສາບແຫ່ງແປວໄຟ ແລະ ມາດເພື່ອເຜົາພວກມັນ. ເຖິງກັບມີບາງເວລາ ທີ່ເບິ່ງຄືວ່າ ພຣະເຈົ້າຕ້ອງການຍື່ນມືຂອງພຣະອົງ ເພື່ອກວາດລ້າງມັງກອນແດງທີ່ຍິ່ງໃຫຍ່ດ້ວຍຕົວພຣະອົງເອງ. ມີແຕ່ສິ່ງນັ້ນທີ່ຈະສາມາດລຶບຄວາມກຽດຊັງໃນຫົວໃຈຂອງພຣະອົງໄດ້. ທຸກຄົນໃນເຮືອນຂອງມັງກອນແດງທີ່ຍິ່ງໃຫຍ່ແມ່ນສັດຮ້າຍທີ່ບໍ່ມີຄວາມເປັນມະນຸດ ແລະ ນີ້ແມ່ນເຫດຜົນທີ່ພຣະເຈົ້າໄດ້ອົດກັ້ນຄວາມໃຈຮ້າຍຂອງພຣະອົງເພື່ອເວົ້າສິ່ງຕໍ່ໄປນີ້ວ່າ: “ໃນທ່າມກາງປະຊາຊົນຂອງເຮົາທຸກຄົນ ແລະ ໃນທ່າມກາງບຸດຊາຍຂອງເຮົາທຸກຄົນ ນັ້ນກໍຄືໃນທ່າມກາງຜູ້ທີ່ເຮົາໄດ້ເລືອກຈາກເຜົ່າພັນມະນຸດທັງໝົດ, ພວກເຈົ້າແມ່ນເປັນກຸ່ມທີ່ຕໍ່າຕ້ອຍທີ່ສຸດ” ພຣະເຈົ້າໄດ້ເລີ່ມການຕໍ່ສູ້ຢ່າງຊີ້ຂາດກັບມັງກອນແດງທີ່ຍິ່ງໃຫຍ່ໃນປະເທດຂອງມັນເອງ ແລະ ພຣະອົງຈະທໍາລາຍມັນເມື່ອແຜນການຂອງພຣະອົງໄດ້ເກີດໝາກຜົນ ແລະ ຈະບໍ່ຍອມໃຫ້ມັນເຮັດໃຫ້ມະນຸດເສື່ອມຊາມ ຫຼື ທໍາລາຍວິນຍານຂອງພວກເຂົາອີກຕໍ່ໄປ. ທຸກມື້ນີ້ ພຣະເຈົ້າຮ້ອງຫາປະຊາຊົນຂອງພຣະອົງທີ່ກໍາລັງນອນຫຼັບຢູ່ເພື່ອຊ່ວຍພວກເຂົາໃຫ້ລອດພົ້ນ ແຕ່ພວກເຂົາທຸກຄົນກໍຍັງຢູ່ໃນສະພາບທີ່ມຶນເມົາ ຄືກັບວ່າ ພວກເຂົາໄດ້ກິນຢານອນຫຼັບ. ຖ້າພຣະເຈົ້າຢຸດປຸກພວກເຂົາແມ່ນແຕ່ວິນາທີດຽວພວກເຂົາກໍຈະກັບຄືນສູ່ສະພາບທີ່ນອນຫຼັບໂດຍບໍ່ຮູ້ເມື່ອຄິງຢ່າງສິ້ນເຊີງ. ເບິ່ງຄືວ່າປະຊາຊົນຂອງພຣະອົງທຸກຄົນແມ່ນເປັນອໍາມະພາດສອງສ່ວນສາມໄປແລ້ວ. ພວກເຂົາບໍ່ຮູ້ຈັກຄວາມຕ້ອງການຂອງຕົວເອງ ຫຼື ຂໍ້ບົກຜ່ອງຂອງຕົວເອງ ແລະ ບໍ່ຮູ້ແມ່ນແຕ່ສິ່ງທີ່ພວກເຂົາຄວນນຸ່ງ ຫຼື ສິ່ງທີ່ພວກເຂົາຄວນກິນ. ສິ່ງນີ້ແມ່ນພຽງພໍທີ່ຈະສະແດງໃຫ້ເຫັນວ່າ ມັງກອນແດງທີ່ຍິ່ງໃຫຍ່ໄດ້ໃຊ້ຄວາມພະຍາຍາມຫຼາຍ ເພື່ອເຮັດໃຫ້ຜູ້ຄົນເສື່ອມຊາມ. ຄວາມຂີ້ຮ້າຍຂອງມັນຂະຫຍາຍໄປທົ່ວທຸກພາກພື້ນຂອງປະເທດຈີນ ແລະ ມັນໄດ້ເຮັດໃຫ້ຫຼາຍຄົນບໍ່ສະບາຍໃຈ ຈົນພວກເຂົາບໍ່ເຕັມໃຈທີ່ຈະຢູ່ໃນປະເທດທີ່ເສື່ອມໂຊມ ແລະ ຕໍ່າຊ້ານີ້ອີກຕໍ່ໄປ. ສິ່ງທີ່ພຣະເຈົ້າຊັງທີ່ສຸດແມ່ນທາດແທ້ຂອງມັງກອນແດງທີ່ຍິ່ງໃຫຍ່ ເຊິ່ງນີ້ຄືເຫດຜົນທີ່ພຣະອົງໄດ້ເຕືອນຜູ້ຄົນທຸກມື້ດ້ວຍຄວາມໂກດຮ້າຍຂອງພຣະອົງ ແລະ ພວກເຂົາດໍາລົງຊີວິດທຸກມື້ພາຍໃຕ້ສາຍຕາອັນໂກດຮ້າຍຫຂອງພຣະອົງ. ເຖິງແນວນັ້ນກໍຕາມ, ທຸກຄົນກໍຍັງບໍ່ຮູ້ຈັກທີ່ຈະສະແຫວງຫາພຣະເຈົ້າ; ກົງກັນຂ້າມ, ພວກເຂົານັ່ງຢູ່ລ້າໆ, ເຝົ້າແນມເບິ່ງ ແລະ ລໍຖ້າໃຫ້ປ້ອນອາຫານ. ເຖິງແມ່ນວ່າ ພວກເຂົາຈະອຶດອາຫານຈົນຕາຍ, ພວກເຂົາກໍຍັງ ບໍ່ເຕັມໃຈທີ່ຈະຊອກຫາອາຫານຂອງຕົວເອງ. ສາມັນສໍານຶກຂອງມະນຸດ ແມ່ນຖືກຊາຕານເຮັດໃຫ້ເສື່ອມຊາມແຕ່ດົນນານແລ້ວ ແລະ ທາດແທ້ຂອງພວກເຂົາກໍຖືກປ່ຽນໄປເປັນຄົນທີ່ມີຈິດໃຈເຢັນຊາ. ມັນບໍ່ແປກໃຈເລີຍທີ່ພຣະເຈົ້າກ່າວວ່າ: “ຖ້າເຮົາບໍ່ໄດ້ເຕືອນພວກເຈົ້າ, ພວກເຈົ້າກໍຍັງຈະບໍ່ຕື່ນຕົວ ແຕ່ຍັງຈະຢູ່ຄືເກົ່າຄືກັບວ່າແຂງເປັນນໍ້າກ້ອນ ແລະ ອີກເທື່ອໜຶ່ງ ຄືກັບວ່າຢູ່ໃນການຈໍາສິນໃນລະດູໜາວ”. ມັນເປັນຄື

ກັບວ່າ ຜູ້ຄົນແມ່ນສັດທີ່ພັກຕົວໃນລະດູໜາວ, ຜ່ານຜ່າລະດູໜາວໂດຍບໍ່ຕ້ອງການອາຫານ ຫຼື ເຄື່ອງດື່ມ; ນີ້ແມ່ນສະຖານະການໃນປັດຈຸບັນຂອງປະຊາຊົນຂອງພຣະເຈົ້າຢ່າງແທ້ຈິງ. ຍ້ອນເຫດຜົນນີ້, ພຣະເຈົ້າຈຶ່ງພຽງແຕ່ຮຽກຮ້ອງໃຫ້ຜູ້ຄົນມາຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດໃນແສງສະຫວ່າງເທົ່ານັ້ນ; ພຣະອົງບໍ່ໄດ້ຮຽກຮ້ອງໃຫ້ຜູ້ຄົນປ່ຽນແປງຫຼາຍຢ່າງ ແລະ ບໍ່ໄດ້ໃຫ້ພວກເຂົາເຕີບໃຫຍ່ໃນຊີວິດຂອງພວກເຂົາຢ່າງຫຼາຍ. ນັ້ນກໍພຽງພໍທີ່ຈະເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ທີ່ບໍ່ສະອາດ ແລະ ສົກກະປົກ ເພື່ອສຳແດງເຖິງອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າຫຼາຍຂຶ້ນ.

ເມື່ອຜູ້ຄົນອ່ານພຣະທຳຂອງພຣະເຈົ້າ, ພວກເຂົາເຂົ້າໃຈແຕ່ຄວາມໝາຍຕາມຕົວອັກສອນຂອງພຣະທຳເຫຼົ່ານັ້ນເທົ່ານັ້ນ ແລະ ບໍ່ສາມາດເຂົ້າໃຈຄວາມສຳຄັນທາງຈິດວິນຍານຂອງພຣະທຳເຫຼົ່ານັ້ນ. ພຽງແຕ່ພຣະທຳທີ່ວ່າ: "ຄື້ນທະເລທີ່ປັ່ນປ່ວນ" ກໍເຮັດໃຫ້ວິລະບຸລຸດ ແລະ ນັກສູ້ສັບສົນແລ້ວ. ເມື່ອຄວາມໂກດຮ້າຍຂອງພຣະເຈົ້າຖືກສະແດງອອກ, ແລ້ວພຣະທຳ, ການກະທຳ ແລະ ອຸປະນິໄສຂອງພຣະອົງຈະບໍ່ແມ່ນຄື້ນທະເລທີ່ປັ່ນປ່ວນບໍ? ເມື່ອພຣະເຈົ້າພິພາກສາມະນຸດຊາດທັງໝົດ, ແລ້ວນີ້ຈະບໍ່ແມ່ນການເປີດເຜີຍຄວາມໂກດຮ້າຍຂອງພຣະອົງບໍ? ນີ້ບໍ່ແມ່ນເວລາທີ່ຄື້ນທະເລທີ່ປັ່ນປ່ວນນັ້ນຖືກບັງຄັບໃຊ້ບໍ? ຍ້ອນຄວາມເສື່ອມຊາມຂອງພວກເຂົາ, ແມ່ນໃຜໃນທ່າມກາງມະນຸດທີ່ບໍ່ໄດ້ດຳລົງຊີວິດໃນທ່າມກາງຄື້ນທະເລທີ່ປັ່ນປ່ວນດັ່ງກ່າວ? ເວົ້າອີກຢ່າງໜຶ່ງກໍຄື ແມ່ນໃຜທີ່ບໍ່ໄດ້ດຳລົງຊີວິດໃນທ່າມກາງຄວາມໂກດຮ້າຍຂອງພຣະເຈົ້າແດ່? ເມື່ອພຣະເຈົ້າປາດຖະໜາທີ່ຈະເຮັດໃຫ້ເກີດມີໄພພິບັດຕໍ່ມະນຸດຊາດ ແລ້ວນັ້ນບໍ່ແມ່ນເວລາທີ່ຜູ້ຄົນເຫັນ "ຄື້ນເມກສີດຳທີ່ເລື່ອນໄຫຼໄປມາ" ບໍ? ແມ່ນໃຜຈະບໍ່ແລ່ນໜີຈາກໄພພິບັດນີ້ແດ່? ຄວາມໂກດຮ້າຍຂອງພຣະເຈົ້າຕົກລົງຄືກັບຝົນຕົກໜັກ ແລະ ພັດເອົາຜູ້ຄົນໄປມາຄືກັບລົມທີ່ຮ້າຍແຮງ. ຜູ້ຄົນແມ່ນຖືກເຮັດໃຫ້ບໍລິສຸດຜ່ານພຣະທຳຂອງພຣະເຈົ້າ ຄືກັບວ່າໄດ້ພົບກັບລົມພາຍຸຫິມະ. ພຣະທຳຂອງພຣະເຈົ້າແມ່ນຍາກທີ່ສຸດທີ່ມະນຸດຈະຢັ່ງເຖິງ. ຜ່ານພຣະທຳຂອງພຣະອົງ ພຣະອົງສ້າງໂລກ ແລະ ຜ່ານພຣະທຳຂອງພຣະອົງ ພຣະອົງນຳພາ ແລະ ເຮັດໃຫ້ມະນຸດທຸກຄົນບໍລິສຸດ. ໃນທີ່ສຸດ ພຣະເຈົ້າຈະຟື້ນຟູຈັກກະວານທັງໝົດໃຫ້ບໍລິສຸດຜ່ານພຣະທຳຂອງພຣະອົງ. ມັນແມ່ນຄວາມຈິງທີ່ພຣະອົງເວົ້າວ່າ ການມີຢູ່ຂອງພຣະວິນຍານຂອງພຣະເຈົ້ານັ້ນບໍ່ວ່າງເປົ່າ ແລະ ໃນພຣະທຳຂອງພຣະອົງເທົ່ານັ້ນ ທີ່ຜູ້ຄົນສາມາດເຫັນເຖິງວິທີການຢູ່ລອດ. ທຸກຄົນເຫັນຄຸນຄ່າພຣະທຳຂອງພຣະອົງ ຍ້ອນວ່າ ພຣະທຳເຫຼົ່ານັ້ນລໍ້ລ້ຽງຊີວິດ. ຍິ່ງຜູ້ຄົນເອົາໃຈໃສ່ກັບພຣະທຳຂອງພຣະເຈົ້າ ພຣະເຈົ້າກໍຍິ່ງມີຄຳຖາມສຳລັບພວກເຂົາ ເຊິ່ງເປັນຄຳຖາມທີ່ເຮັດໃຫ້ພວກເຂົາສັບສົນ ແລະ ເຮັດໃຫ້ພວກເຂົາບໍ່ມີໂອກາດໄດ້ຕອບ. ສະເພາະແຕ່ຄຳຖາມຢ່າງຕໍ່ເນື່ອງຂອງພຣະເຈົ້າຢ່າງດຽວ ກໍພຽງພໍທີ່ຈະເຮັດໃຫ້ຜູ້ຄົນໄຕ່ຕອງໃນຊົ່ວໄລຍະໜຶ່ງ, ແລ້ວແຮງໄກທີ່ຈະເປັນພຣະທຳທັງໝົດຂອງພຣະອົງ. ໃນພຣະເຈົ້າ, ທຸກສິ່ງແມ່ນຄົບຖ້ວນ ແລະ ອຸດົມສົມບູນ ແລະ ບໍ່ມີຫຍັງຂາດເຂີນ. ຢ່າງໃດກໍຕາມ, ຜູ້ຄົນບໍ່ສາມາດມີຄວາມສຸກກັບມັນໄດ້; ພວກເຂົາຮູ້ພຣະທຳຂອງພຣະອົງພຽງແຕ່ຜິວເຜີນເທົ່ານັ້ນ ຄືກັນກັບຄົນທີ່ເຫັນໜັງໄກ່ ແຕ່ບໍ່ສາມາດກິນຊີ້ນມັນໄດ້. ນີ້ໝາຍຄວາມວ່າ ຜູ້ຄົນຂາດຄວາມໂຊກລາບຈົນພວກເຂົາບໍ່ສາມາດມີຄວາມສຸກກັບພຣະເຈົ້າ. ໃນທ່າມກາງຄວາມຄິດຂອງພວກເຂົາ, ແຕ່ລະຄົນ

ແມ່ນມີພາບລັກຂອງຕົນເອງກ່ຽວກັບພຣະເຈົ້າ ເຊິ່ງນີ້ແມ່ນເຫດຜົນທີ່ບໍ່ມີໃຜຮູ້ຈັກວ່າ ພຣະເຈົ້າທີ່ເລື່ອນລອຍ ຫຼື ພາບລັກຂອງຊາຕານເປັນແບບໃດ. ດັ່ງນັ້ນ, ເມື່ອພຣະເຈົ້າກ່າວວ່າ: "ເພາະວ່າສິ່ງທີ່ເຈົ້າເຊື່ອແມ່ນເປັນພຽງພາບລັກຂອງຊາຕານ ແລະ ບໍ່ມີຫຍັງກ່ຽວຂ້ອງກັບພຣະເຈົ້າເອງເລີຍ" ທຸກຄົນກໍປາກບໍ່ອອກຈັກຄຳ: ພວກເຂົາມີຄວາມເຊື່ອເປັນເວລາຫຼາຍປີ ແຕ່ພວກເຂົາບໍ່ຮູ້ວ່າ ສິ່ງທີ່ພວກເຂົາເຊື່ອແມ່ນຊາຕານ ແລະ ບໍ່ແມ່ນພຣະເຈົ້າເອງ. ພວກເຂົາຮູ້ສຶກວ່າງເປົ່າຢູ່ພາຍໃນທັນທີ ແຕ່ພວກເຂົາບໍ່ຮູ້ຈະເວົ້າແນວໃດດີ. ຫຼັງຈາກນັ້ນ ພວກເຂົາໄດ້ເລີ່ມມີຄວາມສັບສົນອີກ. ມີພຽງການເຮັດພາລະກິດດ້ວຍວິທີນີ້ເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດຍອມຮັບແສງສະຫວ່າງໃໝ່ຫຼາຍຂຶ້ນ ແລະ ດ້ວຍເຫດນັ້ນ ກໍປະຕິເສດສິ່ງເກົ່າໆ. ບໍ່ວ່າ ສິ່ງເຫຼົ່ານັ້ນອາດເບິ່ງຄືວ່າ ດີສໍ່າໃດກໍຕາມ ແຕ່ສິ່ງເຫຼົ່ານັ້ນກໍໃຊ້ບໍ່ໄດ້. ມັນຈະເປັນປະໂຫຍດຫຼາຍກວ່າ ທີ່ຈະໃຫ້ຜູ້ຄົນເຂົ້າໃຈພຣະເຈົ້າທີ່ແທ້ຈິງ; ນີ້ຈະເຮັດໃຫ້ພວກເຂົາສາມາດກໍາຈັດສະຖານະທີ່ຄວາມຄິດຂອງພວກເຂົາຍຶດຖືໃນໃຈຂອງພວກເຂົາ ແລະ ຍອມໃຫ້ແຕ່ພຣະເຈົ້າຄອບຄອງພວກເຂົາເທົ່ານັ້ນ. ດ້ວຍວິທີນີ້ເທົ່ານັ້ນ ຄວາມສຳຄັນຂອງການບັງເກີດເປັນມະນຸດຈຶ່ງຈະຖືກບັນລຸຜົນ ເຊິ່ງຈະເຮັດໃຫ້ຜູ້ຄົນສາມາດຮູ້ຈັກພຣະເຈົ້າທີ່ແທ້ຈິງດ້ວຍຕາຂອງພວກເຂົາເອງ.

ພຣະເຈົ້າໄດ້ບອກຜູ້ຄົນ ກ່ຽວກັບສະຖານະການຂອງໂລກແຫ່ງວິນຍານຫຼາຍຄັ້ງ: "ເມື່ອຊາຕານມາຢູ່ຕໍ່ໜ້າເຮົາ, ເຮົາບໍ່ໄດ້ຖອຍຫຼັງຈາກຄວາມໂຫດຮ້າຍປ່າເຖື່ອນຂອງມັນ ແລະ ເຮົາບໍ່ໄດ້ຕົກໃຈຈາກຄວາມສະຫຍົດສະຫຍອງຂອງມັນ: ເຮົາພຽງແຕ່ເມີນເສີຍກັບມັນ". ສິ່ງທີ່ຜູ້ຄົນໄດ້ເຂົ້າໃຈຈາກສິ່ງນີ້ແມ່ນເປັນພຽງສະພາບຂອງຄວາມເປັນຈິງເທົ່ານັ້ນ; ພວກເຂົາບໍ່ຮູ້ຈັກຄວາມຈິງຂອງໂລກແຫ່ງວິນຍານ. ຍ້ອນພຣະເຈົ້າໄດ້ກາຍເປັນເນື້ອໜັງ, ຊາຕານຈຶ່ງໄດ້ໃຊ້ຄຳກ່າວຫາທຸກປະເພດ ໂດຍຫວັງທີ່ຈະໂຈມຕີພຣະເຈົ້າ. ຢ່າງໃດກໍຕາມ, ພຣະເຈົ້າບໍ່ໄດ້ຖອຍກັບ; ພຣະອົງພຽງແຕ່ກ່າວ ແລະ ປະຕິບັດພາລະກິດໃນທ່າມກາງມະນຸດ, ເຮັດໃຫ້ຜູ້ຄົນຮູ້ຈັກພຣະອົງຜ່ານເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງ. ຊາຕານຕາແດງດ້ວຍຄວາມໂມໂຫກັບສິ່ງນີ້ ແລະ ໄດ້ອອກແຮງຢ່າງໜັກ ເພື່ອເຮັດໃຫ້ປະຊາຊົນຂອງພຣະເຈົ້າເປັນລົບ, ຖອຍຫຼັງ ແລະ ເຖິງກັບສູນເສຍແນວທາງຂອງພວກເຂົາ. ຢ່າງໃດກໍຕາມ, ເນື່ອງຈາກຜົນຂອງພຣະທຳຂອງພຣະເຈົ້າ ຊາຕານຈຶ່ງລົ້ມເຫຼວຢ່າງສິ້ນເຊີງ ເຊິ່ງເຮັດໃຫ້ມັນໂມໂຫເພີ່ມຂຶ້ນ. ດັ່ງນັ້ນ, ພຣະເຈົ້າຈຶ່ງເຕືອນທຸກຄົນວ່າ: "ໃນຊີວິດຂອງພວກເຈົ້າ, ອາດຈະມີມື້ທີ່ເຈົ້າ ພົບກັບສະຖານະການດັ່ງກ່າວ: ເຈົ້າຈະເຕັມໃຈປ່ອຍໃຫ້ຕົວເອງຖືກຊາຕານຈັບກຸມໄປບໍ ຫຼື ຈະຍອມໃຫ້ເຮົາຮັບເອົາເຈົ້າ?" ເຖິງແມ່ນວ່າ ຜູ້ຄົນຈະບໍ່ຮູ້ ກ່ຽວກັບສິ່ງທີ່ເກີດຂຶ້ນໃນໂລກແຫ່ງວິນຍານ ແຕ່ທັນທີທີ່ພວກເຂົາໄດ້ຍິນພຣະທຳດັ່ງກ່າວຈາກພຣະເຈົ້າ ພວກເຂົາກໍລະມັດລະວັງ ແລະ ຢ້ານກົວ. ສິ່ງນີ້ຕອບໂຕ້ກັບການໂຈມຕີຂອງຊາຕານ ເຊິ່ງພຽງພໍທີ່ຈະສະແດງເຖິງສະຫງ່າລາສີຂອງພຣະເຈົ້າ. ເຖິງແມ່ນວ່າ ຈະໄດ້ເຂົ້າສູ່ວິທີການແບບໃໝ່ຂອງພາລະກິດ, ຜູ້ຄົນຍັງບໍ່ມີຄວາມຊັດເຈນກ່ຽວກັບຊີວິດໃນອານາຈັກ ແລະ ເຖິງແມ່ນວ່າພວກເຂົາຈະເຂົ້າໃຈສິ່ງນີ້ກໍຕາມ, ພວກເຂົາກໍຂາດຄວາມຊັດເຈນ. ດັ່ງນັ້ນ, ຫຼັງຈາກໄດ້ອອກຄຳເຕືອນແກ່ຜູ້ຄົນ, ພຣະເຈົ້າກໍໄດ້ແນະນຳພວກເຂົາເຖິງແກ່ນແທ້ຂອງຊີວິດໃນອານາຈັກ: "ຊີວິດໃນອານາຈັກແມ່ນຊີວິດຂອງຜູ້ຄົນ ແລະ ພຣະເຈົ້າເອງ". ຍ້ອນພຣະເຈົ້າໄດ້ບັງເກີດເປັນເນື້ອໜັງ, ຊີວິດຂອງສະຫວັນ

ຊັ້ນສາມຈຶ່ງຖືກບັນລຸຢູ່ເທິງແຜ່ນດິນໂລກ. ນີ້ບໍ່ພຽງແຕ່ແມ່ນແຜນການຂອງພຣະເຈົ້າ, ພຣະອົງໄດ້ເຮັດໃຫ້ມັນເກີດຂຶ້ນ. ເມື່ອເວລາຜ່ານໄປ, ຜູ້ຄົນມາຮູ້ຈັກພຣະເຈົ້າດີຂຶ້ນກວ່າເກົ່າ ແລະ ດ້ວຍເຫດນີ້ພວກເຂົາຈຶ່ງສາມາດຊີມລົດຊາດແຫ່ງຊີວິດຂອງສະຫວັນ ຍ້ອນວ່າ ພວກເຂົາຮູ້ສຶກເຖິງພຣະເຈົ້າຢູ່ເທິງແຜ່ນດິນໂລກຢ່າງແທ້ຈິງ ແທນທີ່ຈະຮູ້ສຶກເຖິງພຣະເຈົ້າທີ່ເລື່ອນລອຍໃນສະຫວັນເທົ່ານັ້ນ. ສະນັ້ນ, ຊີວິດຢູ່ເທິງແຜ່ນດິນໂລກແມ່ນຄືກັນກັບໃນສະຫວັນ. ຄວາມຈິງກໍຄື ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ຊີມຄວາມຂົມຂື່ນຂອງໂລກມະນຸດ ແລະ ຍິ່ງພຣະອົງສາມາດເຮັດເຊັ່ນນັ້ນ ມັນກໍຍິ່ງພິສູດໃຫ້ເຫັນວ່າ ພຣະອົງແມ່ນພຣະເຈົ້າທີ່ແທ້ຈິງ. ດັ່ງນັ້ນ, ພຣະທຳທີ່ວ່າ: "ໃນບ່ອນພັກອາໄສຂອງເຮົາ ເຊິ່ງກໍຄືບ່ອນທີ່ເຮົາລີ້ຊ້ອນຢູ່. ຢ່າງໃດກໍຕາມ, ໃນບ່ອນພັກອາໄສຂອງເຮົາ, ເຮົາໄດ້ເອົາຊະນະສັດຕູທັງໝົດຂອງເຮົາ; ໃນບ່ອນພັກອາໄສຂອງເຮົາ, ເຮົາໄດ້ຮັບປະສົບການທີ່ແທ້ຈິງ ກ່ຽວກັບການດຳລົງຊີວິດຢູ່ເທິງແຜ່ນດິນໂລກ; ໃນບ່ອນພັກອາໄສຂອງເຮົາ, ເຮົາສັງເກດເບິ່ງທຸກຄຳເວົ້າ ແລະ ການກະທຳຂອງມະນຸດ ແລະ ເຝົ້າເບິ່ງ ແລະ ນຳພາເຜົ່າພັນມະນຸດທັງໝົດ" ແມ່ນຫຼັກຖານພຽງພໍ ກ່ຽວກັບຄວາມຈິງທີ່ວ່າ ພຣະເຈົ້າໃນປັດຈຸບັນແມ່ນແທ້ຈິງ. ດຳລົງຊີວິດໃນເນື້ອໜັງຢ່າງແທ້ຈິງ, ມີປະສົບການກັບຊີວິດມະນຸດພາຍໃນເນື້ອໜັງຢ່າງແທ້ຈິງ, ເຂົ້າໃຈທຸກຢ່າງກ່ຽວກັບຄວາມເປັນມະນຸດພາຍໃນເນື້ອໜັງຢ່າງແທ້ຈິງ, ເອົາຊະນະມະນຸດພາຍໃນເນື້ອໜັງຢ່າງແທ້ຈິງ, ສູ້ຮົບຢ່າງເດັດດ່ຽວກັບມັງກອນແດງທີ່ຍິ່ງໃຫຍ່ໃນເນື້ອໜັງຢ່າງແທ້ຈິງ ແລະ ເຮັດພາລະກິດທັງໝົດຂອງພຣະເຈົ້າພາຍໃນເນື້ອໜັງ, ນີ້ບໍ່ແມ່ນການດຳລົງຢູ່ຂອງພຣະເຈົ້າທີ່ແທ້ຈິງບໍ? ແຕ່ເຖິງຢ່າງນັ້ນກໍຕາມ ຜູ້ຄົນມັກຈະບໍ່ເຫັນໃຈຄວາມໃນປະໂຫຍກທຳມະດາເຫຼົ່ານີ້ ທີ່ພຣະເຈົ້າກ່າວ; ພວກເຂົາພຽງແຕ່ອ່ານຜ່ານສິ່ງເຫຼົ່ານັ້ນ ແລະ ບໍ່ຮູ້ສຶກເຖິງຄຸນຄ່າ ຫຼື ຄວາມໂດດເດັ່ນໃນພຣະທຳຂອງພຣະເຈົ້າ.

ພຣະທຳຂອງພຣະເຈົ້າປ່ຽນສະພາບໄດ້ດີເປັນພິເສດ. ວະລີທີ່ວ່າ: "ໃນຂະນະທີ່ມະນຸດນອນໝົດສະຕິ" ແມ່ນນຳເອົາຄຳອະທິບາຍກ່ຽວກັບພຣະເຈົ້າເອງ ແລະ ປ່ຽນມັນເປັນຄຳອະທິບາຍກ່ຽວກັບສະພາບຂອງມະນຸດທັງໝົດ. ໃນນີ້: "ການເປັ່ງແສງທີ່ໜາວເຢັນ" ບໍ່ໄດ້ໝາຍເຖິງແສງຟ້າແມບຈາກທິດຕາເວັນອອກ; ກົງກັນຂ້າມ ມັນໝາຍເຖິງພຣະທຳຂອງພຣະເຈົ້າ, ໝາຍເຖິງວິທີການໃໝ່ຂອງພຣະອົງໃນການປະຕິບັດພາລະກິດ. ສະນັ້ນ, ໃນນີ້ຜູ້ຄົນຈຶ່ງສາມາດເຫັນພະລັງຂອງມະນຸດໃນທຸກຮູບແບບ: ຫຼັງຈາກໄດ້ເຂົ້າສູ່ວິທີການໃໝ່, ທຸກຄົນໄດ້ສູນເສຍຄວາມສາມາດໃນການບອກທິດທາງຂອງພວກເຂົາ ແລະ ບໍ່ຮູ້ຈັກວ່າ ພວກເຂົາແມ່ນມາແຕ່ໃສ ແລະ ບໍ່ຮູ້ວ່າ ພວກເຂົາກຳລັງຈະໄປໃສ. "ຄົນສ່ວນໃຫຍ່ແມ່ນຖືກໂຈມຕີດ້ວຍແສງທີ່ຄືກັບເລເຊີ" ໝາຍເຖິງຜູ້ທີ່ຖືກກຳຈັດດ້ວຍວິທີການໃໝ່; ພວກເຂົາແມ່ນຜູ້ທີ່ບໍ່ສາມາດທົນຕໍ່ການທົດລອງ ຫຼື ແບກຮັບການເຮັດໃຫ້ບໍລິສຸດຈາກການທົນທຸກ ແລະ ດັ່ງນັ້ນຈຶ່ງຖືກໂຍນຖິ້ມລົງສູ່ຂຸມທີ່ເລິກທີ່ສຸດອີກຄັ້ງ. ພຣະທຳຂອງພຣະເຈົ້າເປີດເຜີຍມະນຸດໃນລະດັບໜຶ່ງຈົນເບິ່ງຄືວ່າ ຜູ້ຄົນຢ້ານກົວ ເມື່ອພວກເຂົາເຫັນພຣະທຳຂອງພຣະເຈົ້າ ແລະ ພວກເຂົາບໍ່ກ້າທີ່ຈະເວົ້າຫຍັງຄືກັບວ່າ ພວກເຂົາໄດ້ເຫັນປືນກົນທີ່ແນໃສ່ຫົວໃຈຂອງພວກເຂົາ. ຢ່າງໃດກໍຕາມ, ພວກເຂົາຍັງຮູ້ສຶກວ່າ ມີສິ່ງທີ່ດີໃນພຣະທຳຂອງພຣະເຈົ້າ. ໃນໃຈຂອງພວກເຂົາແມ່ນມີຂໍ້ຂັດແຍ້ງຫຼາຍ ແລະ

ພວກເຂົາບໍ່ຮູ້ຈັກສິ່ງທີ່ພວກເຂົາຄວນເຮັດ. ຢ່າງໃດກໍຕາມ, ຍ້ອນຄວາມເຊື່ອຂອງພວກເຂົາ ພວກເຂົາກໍໄດ້ແຕ່ກະກຽມຕົວເອງ ແລະ ຂຸດຄົ້ນເລິກລົງໄປໃນພຣະທຳຂອງພຣະອົງ ຍ້ອນຢ້ານວ່າ ພຣະເຈົ້າອາດຈະປະຖິ້ມພວກເຂົາ. ດັ່ງທີ່ພຣະເຈົ້າກ່າວວ່າ: "ຜູ້ໃດໃນທ່າມກາງມະນຸດ ທີ່ບໍ່ມີຊີວິດໃນສະພາບດັ່ງກ່າວນີ້? ຜູ້ໃດທີ່ບໍ່ໄດ້ມີຊີວິດພາຍໃນແສງສະຫວ່າງຂອງເຮົາ? ເຖິງແມ່ນວ່າ ເຈົ້າຈະເຂັ້ມແຂງ ຫຼື ເຖິງແມ່ນວ່າ ເຈົ້າຈະອ່ອນແອ, ເຈົ້າຈະສາມາດຫຼີກເວັ້ນການມາຂອງແສງສະຫວ່າງຂອງເຮົາໄດ້ແນວໃດ?" ຖ້າພຣະເຈົ້າໃຊ້ບາງຄົນ ແລ້ວເຖິງແມ່ນວ່າ ພວກເຂົາຈະອ່ອນແອ, ພຣະເຈົ້າກໍຍັງຈະໃຫ້ແສງເຍືອງທາງ ແລະ ແສງສະຫວ່າງແກ່ພວກເຂົາໃນການຂ້ຽນຕີຂອງພຣະອົງ; ສະນັ້ນ, ຍິ່ງຜູ້ຄົນອ່ານພຣະທຳຂອງພຣະເຈົ້າຫຼາຍສ່ຳໃດ ພວກເຂົາຍິ່ງເຂົ້າໃຈພຣະອົງຫຼາຍຂຶ້ນ, ພວກເຂົາຍິ່ງເຄົາລົບບູຊາພຣະອົງຫຼາຍຂຶ້ນ ແລະ ພວກເຂົາກໍຍິ່ງບໍ່ກ້າທີ່ຈະບໍ່ມີຄວາມຮອບຄອບ. ການທີ່ຜູ້ຄົນໄດ້ມາເຖິງບ່ອນທີ່ພວກເຂົາຢູ່ໃນປັດຈຸບັນຂອງພວກເຂົາ ແມ່ນລ້ວນແລ້ວແຕ່ຍ້ອນພະລັງອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າ. ຍ້ອນອຳນາດຂອງພຣະທຳຂອງພຣະອົງ ນັ້ນກໍຄື ມັນແມ່ນຍ້ອນພຣະວິນຍານໃນພຣະທຳຂອງພຣະອົງ ທີ່ເຮັດໃຫ້ຜູ້ຄົນຢຳເກງພຣະເຈົ້າ. ເມື່ອພຣະເຈົ້າເປີດເຜີຍໃບໜ້າທີ່ແທ້ຈິງຂອງມະນຸດ, ຄວາມເຄົາລົບຢຳເກງຂອງພວກເຂົາທີ່ມີຕໍ່ພຣະອົງກໍຫຼາຍຂຶ້ນ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງມີຄວາມໝັ້ນໃຈຫຼາຍຂຶ້ນກ່ຽວກັບຄວາມເປັນຈິງຂອງການດຳລົງຢູ່ຂອງພຣະອົງ. ນີ້ແມ່ນໄຟເຍືອງທາງຂອງມະນຸດ ໃນການເຂົ້າໃຈພຣະເຈົ້າເຊິ່ງເປັນເສັ້ນທາງທີ່ພຣະອົງໄດ້ມອບໃຫ້ແກ່ພວກເຂົາ. ຈົ່ງຄິດກ່ຽວກັບສິ່ງນີ້ຢ່າງລະອຽດ: ບໍ່ແມ່ນແບບນີ້ບໍ?

ສິ່ງທີ່ກ່າວມາຂ້າງເທິງບໍ່ແມ່ນໄຟເຍືອງທາງທີ່ຢູ່ຕໍ່ໜ້າມະນຸດທີ່ໃຫ້ແສງສະຫວ່າງແກ່ເສັ້ນທາງຂອງເຂົາບໍ?

# ບົດທີ 14

ມະນຸດບໍ່ເຄີຍຢັ່ງເຖິງສິ່ງໃດຈາກພຣະທຳຂອງພຣະເຈົ້າ. ກົງກັນຂ້າມ, ພວກເຂົາພຽງແຕ່ໃຫ້ "ຄຸນຄ່າ" ສິ່ງເຫຼົ່ານັ້ນແບບຜິວເຜີນ ໂດຍບໍ່ເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງສິ່ງເຫຼົ່ານັ້ນ. ດັ່ງນັ້ນ, ເຖິງແມ່ນວ່າ ຄົນສ່ວນໃຫຍ່ຈະມັກການກ່າວພຣະຄຳຂອງພຣະອົງ, ພຣະເຈົ້າກໍໄດ້ຊີ້ໃຫ້ເຫັນວ່າ ທີ່ຈິງແລ້ວ ພວກເຂົາບໍ່ໄດ້ຖະໜອມສິ່ງເຫຼົ່ານັ້ນເລີຍ. ໃນມຸມມອງຂອງພຣະເຈົ້າ, ເຫດຜົນສຳລັບສິ່ງນີ້ກໍຄືວ່າ ເຖິງແມ່ນວ່າພຣະທຳຂອງພຣະອົງຈະມີຄຸນຄ່າ ແຕ່ຜູ້ຄົນກໍບໍ່ໄດ້ຊີມລົດຊາດຄວາມຫວານທີ່ແທ້ຈິງຂອງພຣະທຳເຫຼົ່ານັ້ນ. ສະນັ້ນ, ພວກເຂົາພຽງແຕ່ສາມາດ "ດັບຄວາມກະຫາຍຂອງພວກເຂົາດ້ວຍຄວາມຄິດທີ່ດີເລີດ" ເຊິ່ງດ້ວຍເຫດນັ້ນ ກໍເປັນການກຳຈັດຫົວໃຈທີ່ໂລພາຂອງພວກເຂົາ. ພຣະວິນຍານຂອງພຣະເຈົ້າບໍ່ພຽງແຕ່ປະຕິບັດພາລະກິດໃນທ່າມກາງມະນຸດທຸກຄົນເທົ່ານັ້ນ ແຕ່ພວກເຂົາຍັງໄດ້ຮັບແສງສະຫວ່າງຈາກພຣະທຳຂອງພຣະເຈົ້າຢ່າງແນ່ນອນ; ພຽງແຕ່ວ່າ ພວກເຂົາບໍ່ສົນໃຈຫຼາຍທີ່ຈະຮູ້ຄຸນຄ່າເຖິງແກ່ນແທ້ຂອງສິ່ງນັ້ນຢ່າງແທ້ຈິງ. ໃນຄວາມຄິດຂອງຜູ້ຄົນ, ຕອນນີ້ແມ່ນຍຸກທີ່ອານາຈັກຖືກເຮັດໃຫ້ເກີດເປັນຈິງຢ່າງສົມບູນ ແຕ່ໃນແກ່ນແທ້ແລ້ວ ນີ້ບໍ່ແມ່ນເລີຍ. ເຖິງແມ່ນວ່າສິ່ງທີ່ພຣະເຈົ້າທຳນາຍແມ່ນສິ່ງທີ່ພຣະອົງເຮັດສຳເລັດ ແຕ່ອານາຈັກຕົວຈິງແມ່ນຍັງບໍ່ໄດ້ມາຮອດແຜ່ນດິນໂລກຢ່າງສົມບູນເທື່ອ. ກົງກັນຂ້າມ, ໃນຂະນະທີ່ມ່ວນມະນຸດປ່ຽນໄປ, ໃນຂະນະທີ່ພາລະກິດຄືບໜ້າ ແລະ ໃນຂະນະທີ່ຟ້າແມບເຫຼື້ອມມາຈາກທິດຕາເວັນອອກ ເຊິ່ງນັ້ນກໍຄື ໃນຂະນະທີ່ພຣະທຳຂອງພຣະເຈົ້າມີຄວາມເລິກເຊິ່ງ, ອານາຈັກກໍຈະລົງມາສູ່ແຜ່ນດິນໂລກຢ່າງຊ້າໆເທື່ອລະບາດກ້າວ ແຕ່ຈະລົງມາສູ່ໂລກນີ້ຢ່າງສົມບູນ. ຂັ້ນຕອນຂອງການມາຂອງອານາຈັກຍັງແມ່ນຂັ້ນຕອນຂອງພາລະກິດສັກສິດຢູ່ເທິງແຜ່ນດິນໂລກ. ໃນຂະນະດຽວກັນນັ້ນ ໃນທົ່ວຈັກກະວານ ພຣະເຈົ້າໄດ້ເລີ່ມພາລະກິດທີ່ຍັງບໍ່ໄດ້ຖືກປະຕິບັດໃນທຸກຍຸກຕະຫຼອດປະຫວັດສາດ: ເພື່ອຮູ້ຈັກແຜ່ນດິນໂລກທັງໝົດ. ຍົກຕົວຢ່າງ: ມີການປ່ຽນແປງທີ່ຍິ່ງໃຫຍ່ເກີດຂຶ້ນທົ່ວຈັກກະວານ ເຊິ່ງລວມເຖິງການປ່ຽນແປງໃນລັດອິດສະຣາເອນ, ມີລັດຖະປະຫານໃນສະຫະລັດອາເມຣິກາ, ການປ່ຽນແປງໃນເອຢິບ, ການປ່ຽນແປງໃນສະຫະພາບໂຊຫວຽດ ແລະ ການໂຄ່ນລົ້ມປະເທດຈີນ. ເມື່ອຈັກກະວານທັງໝົດໄດ້ສະຫງົບລົງ ແລະ ໄດ້ຖືກຟື້ນຟູຄືນເປັນປົກກະຕິ, ພາລະກິດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກກໍຈະສຳເລັດ; ນັ້ນແມ່ນເວລາທີ່ອານາຈັກຈະມາສູ່ແຜ່ນດິນໂລກ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງພຣະທຳທີ່ວ່າ: "ເມື່ອທຸກຊາດທົ່ວໂລກໄດ້ຖືກທຳລາຍ, ເມື່ອນັ້ນ ອານາຈັກຂອງເຮົາຈະຖືກກໍ່ຕັ້ງຂຶ້ນ ແລະ ເປັນຮູບປະທຳ ແລະ ເມື່ອນັ້ນ ເຮົາຈະປ່ຽນແປງ ແລະ ຫັນມາພະເຊີນກັບຈັກກະວານທັງໝົດ". ພຣະເຈົ້າບໍ່ໄດ້ເຊື່ອງຫຍັງຈາກມະນຸດຊາດ; ພຣະອົງໄດ້ສືບຕໍ່ບອກຜູ້ຄົນກ່ຽວກັບຄວາມອຸດົມສົມບູນຂອງພຣະອົງ ແຕ່ພວກເຂົາບໍ່ສາມາດຄິດອອກວ່າ ພຣະອົງໝາຍເຖິງຫຍັງ ແລະ ພຽງແຕ່ຍອມຮັບເອົາພຣະທຳຂອງພຣະອົງຄືກັບຄົນໂງ່. ໃນຂັ້ນຕອນຂອງພາລະກິດນີ້, ມະນຸດໄດ້ຮຽນຮູ້ເຖິງການທີ່ບໍ່ສາມາດຢັ່ງເຖິງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ຕອນນີ້ແມ່ນສາມາດຮູ້ຄຸນຄ່າເຖິງຄວາມຍາກຂອງການເຂົ້າໃຈພຣະອົງ; ຍ້ອນເຫດຜົນນີ້, ພວກເຂົາຈຶ່ງຮູ້ສຶກວ່າ

ໃນທຸກມື້ນີ້ ການເຊື່ອໃນພຣະເຈົ້າແມ່ນສິ່ງທີ່ຍາກທີ່ສຸດທີ່ຈະເຮັດໄດ້, ຍາກຄ້າຍຄືກັບການສອນໝູຮ້ອງເພງ. ພວກເຂົາແມ່ນໝົດປັນຍາຢ່າງສິ້ນເຊີງ ຄືກັບໝູທີ່ຕິດແຮ້ວ. ແນ່ນອນ ບໍ່ວ່າຄົນໜຶ່ງຈະມີພະລັງຫຼາຍສໍ່າໃດ ຫຼື ຄົນໜຶ່ງຈະຊໍານານໃນທັກສະຫຼາຍສໍ່າໃດ ຫຼື ບໍ່ວ່າຄົນໜຶ່ງຈະມີຄວາມສາມາດຢ່າງບໍ່ມີຂອບເຂດກໍຕາມ ແຕ່ເມື່ອມາເຖິງພຣະທໍາຂອງພຣະເຈົ້າ ສິ່ງດັ່ງກ່າວແມ່ນບໍ່ມີຄວາມໝາຍໃດໆ. ມັນເປັນຄືກັບວ່າ ໃນສາຍຕາຂອງພຣະເຈົ້າ ມວນມະນຸດແມ່ນກອງຂີ້ເທົ່າຂອງເຈ້ຍທີ່ໄໝ້ແລ້ວ ທີ່ປາສະຈາກຄຸນຄ່າໃດໆຢ່າງສິ້ນເຊີງ ແລ້ວນັບພາສາຫຍັງກັບການມີປະໂຫຍດ. ນີ້ແມ່ນການອະທິບາຍທີ່ດີທີ່ສຸດກ່ຽວກັບຄວາມໝາຍທີ່ແທ້ຈິງຂອງພຣະທໍາທີ່ວ່າ: “ຈາກມຸມມອງຂອງພວກເຂົາ ເຮົາໄດ້ລີ້ລັບຫຼາຍຂຶ້ນ ແລະ ຫຼາຍຂຶ້ນກວ່າເກົ່າ ແລະ ບໍ່ສາມາດຢັ່ງເຖິງຫຼາຍຂຶ້ນ”. ຈາກສິ່ງນີ້ ມັນຈຶ່ງຊັດເຈນວ່າພຣະທໍາຂອງພຣະເຈົ້າຄືບໜ້າໄປໂດຍທໍາມະຊາດ ແລະ ຖືກປະຕິບັດອີງຕາມອະໄວຍະວະການຮັບຮູ້ຂອງມະນຸດທີ່ຈະສາມາດຮັບເອົາໄດ້. ເມື່ອທໍາມະຊາດຂອງຄວາມເປັນມະນຸດໝັ້ນຄົງ ແລະ ບໍ່ສັ່ນຄອນ, ພຣະທໍາທີ່ພຣະເຈົ້າກ່າວກໍຈະສອດຄ່ອງກັບແນວຄິດຂອງພວກເຂົາຢ່າງສິ້ນເຊີງ ແລະ ແນວຄິດເຫຼົ່ານີ້ເບິ່ງຄືເກືອບວ່າຈະເປັນຄືກັນກັບພຣະເຈົ້າ ໂດຍບໍ່ມີຄວາມແຕກຕ່າງແມ່ນແຕ່ໜ້ອຍເລີຍ. ສິ່ງນີ້ຂ້ອນຂ້າງເຮັດໃຫ້ຜູ້ຄົນຮູ້ຈັກ “ຄວາມເປັນຈິງຂອງພຣະເຈົ້າ” ແຕ່ນັ້ນບໍ່ແມ່ນວັດຖຸປະສົງຫຼັກຂອງພຣະອົງ. ພຣະເຈົ້າກໍາລັງອະນຸຍາດໃຫ້ຜູ້ຄົນປັກຫຼັກກ່ອນເລີ່ມພາລະກິດທີ່ແທ້ຈິງຂອງພຣະອົງຢູ່ແຜ່ນດິນໂລກຢ່າງເປັນທາງການ. ສະນັ້ນ, ໃນຊ່ວງການເລີ່ມຕົ້ນນີ້ທີ່ສັບສົນຫຼາຍສໍາລັບມະນຸດ, ພວກເຂົາກໍາລັງຮູ້ວ່າແນວຄວາມຄິດເກົ່າຂອງພວກເຂົານັ້ນບໍ່ຖືກຕ້ອງ ແລະ ພຣະເຈົ້າ ແລະ ມວນມະນຸດແມ່ນແຕກຕ່າງກັນດັ່ງກັບສະຫວັນ ແລະ ແຜ່ນດິນໂລກ ແລະ ບໍ່ໄດ້ຄ້າຍຄືກັນເລີຍ. ຍ້ອນບໍ່ສາມາດປະເມີນພຣະທໍາຂອງພຣະເຈົ້າໄດ້ອີກຕໍ່ໄປບົນພື້ນຖານແນວຄິດຂອງມະນຸດ, ມະນຸດຈຶ່ງເລີ່ມເບິ່ງພຣະເຈົ້າໃນມຸມມອງໃໝ່ທັນທີ; ດ້ວຍເຫດນັ້ນ, ພວກເຂົາຈຶ່ງຈ້ອງເບິ່ງພຣະເຈົ້າດ້ວຍຄວາມປະຫຼາດໃຈ ຄືກັບວ່າ ພຣະເຈົ້າທີ່ແທ້ຈິງແມ່ນບໍ່ສາມາດເຂົ້າຫາໄດ້ ຄືກັບພຣະເຈົ້າທີ່ແນມບໍ່ເຫັນ ແລະ ຈັບຕ້ອງບໍ່ໄດ້ ແລະ ຄືກັບວ່າເນື້ອໜັງຂອງພຣະເຈົ້າທີ່ບັງເກີດເປັນມະນຸດເປັນພຽງເປືອກພາຍນອກທີ່ປາສະຈາກແກ່ນແທ້ຂອງພຣະອົງ. ເຖິງແມ່ນວ່າພຣະອົງຈະແມ່ນພຣະວິນຍານທີ່ບັງເກີດເປັນມະນຸດ, ພຣະອົງກໍສາມາດປ່ຽນເປັນຮູບຊົງຂອງພຣະວິນຍານ ແລະ ລອຍຈາກໄປໃນເວລາໃດກໍໄດ້; ສະນັ້ນ ຜູ້ຄົນຈຶ່ງຂ້ອນຂ້າງມີຄວາມຄິດທີ່ລະມັດລະວັງ. ເມື່ອກ່າວເຖິງພຣະເຈົ້າ, ພວກເຂົາກໍຕົບແຕ່ງພຣະອົງດ້ວຍແນວຄິດຂອງພວກເຂົາເອງ ໂດຍອ້າງວ່າ ພຣະອົງສາມາດຂີ່ເມກ ແລະ ໝອກ, ຍ່າງຢູ່ເທິງນໍ້າ ແລະ ປາກົດຕົວ ແລະ ຫາຍຕົວໃນທ່າມກາງມະນຸດໄດ້ຢ່າງວ່ອງໄວ. ບາງຄົນເຖິງກັບອະທິບາຍຢ່າງລາຍລະອຽດ. ຍ້ອນຄວາມໂງ່ຈ້າ ແລະ ການຂາດການຢັ່ງຮູ້ຂອງຜູ້ຄົນ, ພຣະເຈົ້າຈຶ່ງກ່າວວ່າ: “ເມື່ອພວກເຂົາເຊື່ອວ່າ ພວກເຂົາໄດ້ຕໍ່ຕ້ານເຮົາ ຫຼື ລະເມີດກົດບັນຍັດແຫ່ງການບໍລິຫານ, ແຕ່ເຮົາກໍຍັງເຮັດຄືບໍ່ເຫັນ”.

ພຣະເຈົ້າເປີດໂປງໃບໜ້າທີ່ຂີ້ຮ້າຍຂອງມວນມະນຸດ ແລະ ໂລກພາຍໃນຂອງພວກເຂົາດ້ວຍຄວາມຖືກຕ້ອງທີ່ສຸດ ໂດຍບໍ່ເຄີຍພາດເປົ້າໝາຍຂອງພຣະອົງແມ່ນແຕ່ໜ້ອຍດຽວ. ສາມາດເຖິງກັບເວົ້າວ່າ ພຣະອົງບໍ່ເຄີຍເຮັດຜິດຫຍັງເລີຍ. ສິ່ງນີ້ແມ່ນຫຼັກຖານທີ່ເຮັດໃຫ້ຜູ້ຄົນເຊື່ອຢ່າງສິ້ນເຊີງ.

ເນື່ອງຈາກຫຼັກການທີ່ຢູ່ເບື້ອງຫຼັງພາລະກິດຂອງພຣະເຈົ້າ, ພຣະທຳ ແລະ ການກະທຳທັງຫຼາຍຂອງພຣະອົງຈຶ່ງເຮັດໃຫ້ມີຄວາມປະທັບໃຈທີ່ບໍ່ສາມາດລຶບລ້າງອອກໄດ້ ແລະ ດ້ວຍເຫດນັ້ນ ຜູ້ຄົນເບິ່ງຄືວ່າໄດ້ຮັບຄວາມເຂົ້າໃຈກ່ຽວກັບພຣະອົງເລິກເຊິ່ງຂຶ້ນ ແລະ ຄືກັບວ່າ ພວກເຂົາໄດ້ຄົ້ນພົບສິ່ງທີ່ມີຄຸນຄ່າໃນຕົວພຣະອົງ. “ໃນຄວາມຊົງຈຳຂອງພວກເຂົາ, ເຮົາແມ່ນພຣະເຈົ້າທີ່ສະແດງຄວາມເມດຕາໃຫ້ກັບຜູ້ຄົນຫຼາຍກວ່າທີ່ຈະຂ້ຽນຕີພວກເຂົາ ຫຼື ເຮົາເປັນພຣະເຈົ້າທີ່ບໍ່ຈິງຈັງໃນສິ່ງທີ່ເຮົາເວົ້າ. ສິ່ງເຫຼົ່ານີ້ຄືຈິນຕະນາການທີ່ເກີດຈາກຄວາມຄິດຂອງມະນຸດ ແລະ ບໍ່ໄດ້ສອດຄ່ອງກັບຄວາມຈິງ”. ເຖິງແມ່ນວ່າມະນຸດຊາດບໍ່ເຄີຍເຫັນຄວາມສຳຄັນໃດໆໃນໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ແຕ່ພວກເຂົາກໍຮູ້ “ດ້ານຂ້າງຂອງອຸປະນິໄສຂອງພຣະອົງ” ຄືກັບຫຼັງມືຂອງພວກເຂົາ; ພວກເຂົາຫາຂໍ້ຜິດໃນພຣະທຳ ແລະການກະທຳຂອງພຣະເຈົ້າຕະຫຼອດ. ນີ້ກໍຍ້ອນວ່າ ຕະຫຼອດເວລາ ຜູ້ຄົນເຕັມໃຈຫຼາຍທີ່ຈະເອົາໃຈໃສ່ກັບສິ່ງທີ່ບໍ່ດີ ແລະ ເມີນເສີຍຕໍ່ສິ່ງທີ່ດີ ໂດຍພຽງແຕ່ດູຖູກການກະທຳຂອງພຣະເຈົ້າ. ຍິ່ງພຣະເຈົ້າກ່າວຢ່າງຖ່ອມຕົວວ່າ ພຣະອົງປິດບັງຕົວພຣະອົງເອງໃນບ່ອນອາໄສຂອງພຣະອົງຫຼາຍສໍ່າໃດ, ມວນມະນຸດກໍຍິ່ງຮຽກຮ້ອງຈາກພຣະອົງຫຼາຍຂຶ້ນສໍ່ານັ້ນ. ພວກເຂົາເວົ້າວ່າ “ຖ້າພຣະເຈົ້າທີ່ບັງເກີດເປັນມະນຸດກຳລັງສັງເກດເບິ່ງທຸກການກະທຳຂອງມວນມະນຸດ ແລະ ກຳລັງປະສົບກັບຊີວິດມະນຸດ ແລ້ວເປັນຫຍັງສ່ວນໃຫຍ່ແລ້ວ ພຣະເຈົ້າຈຶ່ງບໍ່ຮູ້ຈັກສະຖານະການຕົວຈິງຂອງພວກເຮົາ? ນີ້ໝາຍຄວາມວ່າ ພຣະເຈົ້າລີ້ລັບຢ່າງແທ້ຈິງບໍ?” ເຖິງແມ່ນວ່າພຣະເຈົ້າຈະເບິ່ງເລິກເຂົ້າໄປໃນຫົວໃຈຂອງມະນຸດ ແຕ່ພຣະອົງກໍຍັງປະຕິບັດພາລະກິດຕາມສະພາບການຕົວຈິງຂອງມວນມະນຸດ ໂດຍບໍ່ໄດ້ເລື່ອນລອຍ ຫຼື ເໜືອທຳມະຊາດ. ເພື່ອກຳຈັດອຸປະນິໄສດັ່ງເດີມຂອງມວນມະນຸດຢ່າງສິ້ນເຊີງ, ພຣະເຈົ້າບໍ່ໄດ້ໃຊ້ຄວາມພະຍາຍາມໃນການກ່າວຈາກມຸມມອງຕ່າງໆ ເພື່ອເປີດໂປງທຳມະຊາດທີ່ແທ້ຈິງຂອງຜູ້ຄົນ ແລະປະກາດການພິພາກສາຕໍ່ຄວາມບໍ່ເຊື່ອຟັງຂອງພວກເຂົາ ເຊິ່ງບຶດໜຶ່ງກ່າວວ່າ ພຣະອົງຈະຈັດການກັບທຸກຄົນ ແລະ ບຶດໜຶ່ງກໍປະກາດວ່າ ພຣະອົງຈະຊ່ວຍກຸ່ມຄົນໃຫ້ລອດພົ້ນ; ບໍ່ວ່າຈະ ເປັນການວາງເງື່ອນໄຂຕໍ່ມະນຸດ ຫຼື ເປັນການເຕືອນພວກເຂົາກໍຕາມ; ແລະ ໃນທີ່ສຸດກໍຈະສຳຫຼວດຂ້າງໃນຂອງພວກເຂົາຢ່າງລະອຽດ ແລະ ໃຫ້ການປິ່ນປົວ. ສະນັ້ນ, ພາຍໃຕ້ການນຳພາຂອງພຣະທຳຂອງພຣະເຈົ້າ, ມັນກໍຄືກັບວ່າ ມະນຸດໄດ້ເດີນທາງໄປທຸກມຸມຂອງແຜ່ນດິນໂລກ ແລະ ເຂົ້າສູ່ສວນທີ່ອຸດົມສົມບູນ ທີ່ມີດອກໄມ້ແຕ່ລະດອກແຂ່ງຂັນກັນວ່າ ດອກໃດເປັນດອກທີ່ງາມທີ່ສຸດ. ບໍ່ວ່າພຣະເຈົ້າຈະກ່າວຫຍັງກໍຕາມ ມະນຸດຈະເຂົ້າສູ່ພຣະທຳຂອງພຣະອົງ ຄືກັບວ່າ ພຣະເຈົ້າເປັນເຫຼັກກ້າທີ່ດຶງດູດສິ່ງໃດກໍໄດ້ທີ່ມີທາດເຫຼັກໃນຕົວຂອງມັນ. ເມື່ອໄດ້ອ່ານພຣະທຳທີ່ວ່າ: “ມະນຸດບໍ່ສົນໃຈເຮົາ ເຊິ່ງດ້ວຍເຫດນັ້ນ ເຮົາກໍບໍ່ຈິງຈັງກັບເຂົາເຊັ່ນດຽວກັນ. ພວກເຂົາບໍ່ສົນໃຈເຮົາ, ສະນັ້ນ ເຮົາກໍບໍ່ຈຳເປັນຕ້ອງໃຊ້ຄວາມພະຍາຍາມກັບພວກເຂົາຫຼາຍ. ສິ່ງນີ້ບໍ່ໄດ້ດີທີ່ສຸດສຳລັບທັງສອງໂລກບໍ?” ເບິ່ງຄືວ່າ ປະຊາຊົນຂອງພຣະເຈົ້າທຸກຄົນຖືກໂຈມຕີຈິນຕົກລົງໃນຂຸມເລິກທີ່ສຸດອີກຄັ້ງ ຫຼື ຖືກໂຈມຕີໃສ່ຈຸດສຳຄັນອີກຄັ້ງ ເຊິ່ງເຮັດໃຫ້ພວກເຂົາຕົກໃຈຫຼາຍ. ສະນັ້ນ, ພວກເຂົາຈຶ່ງເຂົ້າໄປໃນແນວທາງນີ້ອີກຄັ້ງ. ພວກເຂົາມີຄວາມສັບສົນເປັນພິເສດກ່ຽວກັບພຣະທຳທີ່ວ່າ: “ໃນຖານະເປັນຄົນຂອງເຮົາໃນອານາຈັກ, ຖ້າພວກເຈົ້າບໍ່ສາມາດ

ຮັກສາໜ້າທີ່ຂອງໂຕເອງໄດ້, ເຮົາກໍຈະກຽດຊັງ ແລະ ປະຕິເສດພວກເຈົ້າ!” ຄົນສ່ວນໃຫຍ່ຮູ້ສຶກເຈັບປວດຈົນພວກເຂົາຕ້ອງມີນໍ້າຕາ ໂດຍຄິດວ່າ “ຂ້ານ້ອຍມີຄວາມລຳບາກໃນການປີນອອກຈາກຂຸມເລິກທີ່ສຸດ, ສະນັ້ນ ຂ້ານ້ອຍກໍຈະບໍ່ມີຄວາມຫວັງອີກເລີຍ ຖ້າຂ້ານ້ອຍຕົກລົງໄປອີກຄັ້ງ. ຂ້ານ້ອຍບໍ່ໄດ້ຮັບຫຍັງໃນໂລກມະນຸດ ແລະ ໄດ້ຜ່ານຄວາມຫຍຸ້ງຍາກ ແລະ ຄວາມລຳບາກຍາກແຄ້ນທຸກຮູບແບບໃນຊີວິດຂອງຂ້ານ້ອຍ. ໂດຍສະເພາະແລ້ວ ນັບແຕ່ໄດ້ມີຄວາມເຊື່ອ ຂ້ານ້ອຍກໍປະສົບກັບການຖືກປະຖິ້ມດ້ວຍຄົນຮັກ, ການຂົ່ມເຫັງຈາກຄອບຄົວຂອງຂ້ານ້ອຍ ແລະ ການຖືກຄົນອື່ນໃນສັງຄົມກ່າວຮ້າຍ ແລະ ຂ້ານ້ອຍບໍ່ໄດ້ເພີດເພີນກັບຄວາມສຸກຂອງໂລກເລີຍ. ຖ້າຂ້ານ້ອຍຕົກລົງຂຸມເລິກທີ່ສຸດອີກຄັ້ງແລ້ວຂ້ານ້ອຍຈະບໍ່ໄດ້ໃຊ້ຊີວິດທີ່ຍິ່ງບໍ່ມີປະໂຫຍດຫຍັງຫຼາຍກວ່ານີ້ບໍ?” (ຍິ່ງຜູ້ຄົນຄິດກ່ຽວກັບສິ່ງນີ້ຫຼາຍສໍ່າໃດ ພວກເຂົາກໍຍິ່ງຮູ້ສຶກໂສກເສົ້າຫຼາຍສໍ່ານັ້ນ). “ຄວາມຫວັງທັງໝົດຂອງຂ້ານ້ອຍແມ່ນຖືກຝາກຝັງໄວ້ໃນກໍາມືຂອງພຣະເຈົ້າແລ້ວ. ຖ້າພຣະອົງປະຖິ້ມຂ້ານ້ອຍ, ມັນກໍຈະດີກວ່າຖ້າຂ້ານ້ອຍຕາຍໃນຕອນນີ້... ຢ່າງໃດກໍຕາມ ທຸກສິ່ງແມ່ນຖືກກຳນົດລ່ວງໜ້າໂດຍພຣະເຈົ້າ ເຊິ່ງດ້ວຍເຫດນັ້ນ ຂ້ານ້ອຍຈຶ່ງສາມາດສະແຫວງຫາທີ່ຈະຮັກພຣະເຈົ້າເທົ່ານັ້ນ; ສ່ວນສິ່ງອື່ນໆແມ່ນເປັນເລື່ອງສຳຮອງ. ເປັນຫຍັງສິ່ງນີ້ຈຶ່ງເປັນຊະຕາກຳຂອງຂ້ອຍ?” ຍິ່ງຫຼາຍຄົນຄິດເຊັ່ນນີ້ ພວກເຂົາກໍຍິ່ງເຂົ້າໃກ້ມາດຕະຖານຂອງພຣະເຈົ້າ ແລະ ວັດຖຸປະສົງຂອງພຣະທຳຂອງພຣະອົງ. ດ້ວຍວິທີນີ້, ວັດຖຸປະສົງຂອງພຣະທຳຂອງພຣະເຈົ້າກໍຖືກບັນລຸ. ຫຼັງຈາກມະນຸດເຫັນພຣະທຳຂອງພຣະເຈົ້າ, ພວກເຂົາທຸກຄົນກໍປະສົບກັບການຕໍ່ສູ້ທາງດ້ານອຸດົມການຢູ່ພາຍໃນ. ທາງເລືອກດຽວຂອງພວກເຂົາແມ່ນການຍອມຕໍ່ສິ່ງທີ່ຊະຕາກຳບົ່ງການເທົ່ານັ້ນ ແລະ ດ້ວຍວິທີນີ້ ວັດຖຸປະສົງຂອງພຣະເຈົ້າກໍຈະຖືກບັນລຸ. ຍິ່ງພຣະທຳຂອງພຣະເຈົ້າໂຫດຮ້າຍສໍ່າໃດ ໂລກພາຍໃນຂອງມະນຸດກໍຍິ່ງສັບຊ້ອນຫຼາຍສໍ່ານັ້ນຈາກສິ່ງນີ້. ນີ້ຄືກັນກັບການບີບບາດແຜ; ຍິ່ງບີບແຮງສໍ່າໃດ ມັນກໍຍິ່ງເຈັບຫຼາຍສໍ່ານັ້ນຈົນເຖິງຂັ້ນທີ່ຜູ້ຄົນວົນວຽນຢູ່ລະຫວ່າງຊີວິດ ແລະ ຄວາມຕາຍ ແລະ ເຖິງກັບສາມາດສູນເສຍຄວາມໝັ້ນໃຈຢາກຈະຢູ່ລອດໄດ້. ສະນັ້ນ, ເມື່ອມະນຸດທົນທຸກຫຼາຍທີ່ສຸດ ແລະ ມີຄວາມໝົດຫວັງຫຼາຍ ພວກເຂົາຈຶ່ງຈະສາມາດມອບຫົວໃຈທີ່ແທ້ຈິງຂອງພວກເຂົາໃຫ້ແກ່ພຣະເຈົ້າ. ທຳມະຊາດຂອງມະນຸດແມ່ນຄືກັບວ່າ ຖ້າຍັງມີຄວາມຫວັງແມ່ນແຕ່ໜ້ອຍດຽວ ພວກເຂົາກໍຈະບໍ່ໄປຫາພຣະເຈົ້າເພື່ອຂໍຄວາມຊ່ວຍເຫຼືອ ແຕ່ກົງກັນຂ້າມ ພວກເຂົາຈະໃຊ້ວິທີການທີ່ພຽງພໍສຳລັບຕົວເອງເພື່ອຢູ່ລອດໂດຍທຳມະຊາດ. ນີ້ກໍຍ້ອນວ່າ ທຳມະຊາດຂອງມວນມະນຸດແມ່ນການຄິດວ່າຕົວເອງຊອບທຳ ແລະ ຜູ້ຄົນມັກທີ່ຈະດູຖູກຄົນອື່ນ. ສະນັ້ນ, ພຣະເຈົ້າຈຶ່ງກ່າວວ່າ: “ບໍ່ມີມະນຸດແມ່ນແຕ່ຄົນໜຶ່ງ ທີ່ຈະສາມາດຮັກເຮົາໃນເວລາທີ່ພວກເຂົາຢູ່ໃນສະພາບທີ່ສຸກສະບາຍ; ບໍ່ມີແມ່ນແຕ່ຄົນໜຶ່ງໄດ້ຍື່ນມືຫາເຮົາໃນເວລາທີ່ພວກເຂົາມີຄວາມສະຫງົບສຸກ ແລະ ມີຄວາມສຸກເພື່ອໃຫ້ເຮົາໄດ້ເປັນສ່ວນໜຶ່ງໃນຄວາມສຸກຂອງພວກເຂົາ”. ສິ່ງນີ້ແມ່ນໜ້າຜິດຫວັງແທ້ໆ; ພຣະເຈົ້າໄດ້ສ້າງມະນຸດ ແຕ່ເມື່ອພຣະອົງມາໂລກມະນຸດ ຜູ້ຄົນກໍສະແຫວງຫາທີ່ຈະຕໍ່ຕ້ານພຣະອົງ ແລະ ຂັບໄລ່ພຣະອົງຈາກອະນາເຂດຂອງພວກເຂົາ ຄືກັບວ່າ ພຣະອົງເປັນຄືເດັກກຳພ້າທີ່ລ່ອງລອຍໄປທົ່ວໂລກ ຫຼືຄືກັບມະນຸດໂລກທີ່ບໍ່ມີປະເທດ. ບໍ່ມີຜູ້ໃດມີຄວາມຮູ້ສຶກຍຶດຕິດກັບພຣະເຈົ້າ, ບໍ່ມີຜູ້ໃດຮັກພຣະອົງ

ຢ່າງແທ້ຈິງ ແລະ ບໍ່ມີຜູ້ໃດເຄີຍຕ້ອນຮັບການມາຂອງພຣະອົງ. ກົງກັນຂ້າມ, ເມື່ອເຫັນການມາຂອງພຣະເຈົ້າ, ກ້ອນເມກກໍເປັນເງົາປົກຄຸມໃບໜ້າອັນເບີກບານໃນກະພິບຕາ ຄືກັບວ່າ ພາຍຸກຳລັງມາຢ່າງກະທັນຫັນ ຫຼື ຄືກັບວ່າ ພຣະເຈົ້າອາດຈະເອົາຄວາມສຸກຂອງຄອບຄົວຂອງພວກເຂົາໄປ ແລະ ຄືກັບວ່າພຣະເຈົ້າບໍ່ເຄີຍໃຫ້ພອນແກ່ມະນຸດເລີຍ, ແຕ່ກົງກັນຂ້າມ ພັດມີແຕ່ເອົາຄວາມໂຊກຮ້າຍມາໃຫ້ພວກເຂົາ. ສະນັ້ນ, ໃນແນວຄິດຂອງມະນຸດແລ້ວ ພຣະເຈົ້າບໍ່ມີປະໂຫຍດຫຍັງ ແຕ່ເປັນຜູ້ທີ່ສາບແຊ່ງພວກເຂົາຕະຫຼອດ. ຍ້ອນສິ່ງນີ້ ຜູ້ຄົນຈຶ່ງບໍ່ສົນໃຈພຣະອົງ ຫຼື ຕ້ອນຮັບພຣະອົງ; ພວກເຂົາເຢັນຊາຕໍ່ພຣະອົງຕະຫຼອດ ແລະ ເປັນແບບນີ້ຕະຫຼອດ. ຍ້ອນມະນຸດມີສິ່ງເຫຼົ່ານີ້ໃນຫົວໃຈຂອງພວກເຂົາ, ພຣະເຈົ້າຈຶ່ງກ່າວວ່າ ມວນມະນຸດແມ່ນບໍ່ມີເຫດຜົນ ແລະ ຊົ່ວຊ້າ ແລະ ບໍ່ສາມາດຮັບຮູ້ແມ່ນແຕ່ຄວາມຮູ້ສຶກທີ່ມະນຸດຄວນມີ. ມະນຸດບໍ່ສະແດງໃຫ້ເຫັນເຖິງຄວາມເຫັນໃຈ ທີ່ມີຕໍ່ຄວາມຮູ້ສຶກຂອງພຣະເຈົ້າ ແຕ່ກົງກັນຂ້າມ ມະນຸດໃຊ້ສິ່ງທີ່ເອີ້ນວ່າ "ຄວາມຊອບທຳ" ເພື່ອຈັດການກັບພຣະເຈົ້າ. ພວກເຂົາເປັນແບບນີ້ເປັນເວລາຫຼາຍປີ ແລະ ຍ້ອນເຫດຜົນນີ້ ພຣະເຈົ້າຈຶ່ງກ່າວວ່າ ອຸປະນິໄສຂອງພວກເຂົາບໍ່ໄດ້ປ່ຽນແປງ. ນີ້ສະແດງໃຫ້ເຫັນວ່າ ພວກເຂົາບໍ່ມີແກ່ນສານຫຼາຍໄປກວ່າຂົນນົກໃນກຳມືໜຶ່ງ. ສາມາດເວົ້າໄດ້ວ່າ ມະນຸດແມ່ນຄົນຊົ່ວທີ່ບໍ່ມີຄ່າ ຍ້ອນພວກເຂົາບໍ່ໃຫ້ຄຸນຄ່າກັບຕົວເອງ. ຖ້າພວກເຂົາບໍ່ຮັກແມ່ນແຕ່ຕົວເອງ ແລະ ກົງກັນຂ້າມ ຢຽບຢ່ຳຕົວເອງ ແລ້ວນີ້ບໍ່ໄດ້ສະແດງໃຫ້ເຫັນເຖິງຄວາມບໍ່ມີຄ່າຂອງພວກເຂົາບໍ? ມະນຸດແມ່ນຄືກັນກັບຍິງຊົ່ວທີ່ຫຼິ້ນເກມກັບຕົວເອງ ແລະ ມອບຕົວເອງດ້ວຍຄວາມເຕັມໃຈໃຫ້ຄົນອື່ນລ່ວງເກີນ. ເຖິງດັ່ງນັ້ນ, ຜູ້ຄົນກໍຍັງບໍ່ຮູ້ວ່າ ພວກເຂົາຕ່ຳຕ້ອຍພຽງໃດ. ພວກເຂົາມີຄວາມສຸກໃນການເຮັດວຽກເພື່ອຜູ້ອື່ນ ຫຼື ໂອ້ລົມກັບຜູ້ອື່ນ ໂດຍເອົາຕົວເອງໄປຢູ່ພາຍໃຕ້ການຄວບຄຸມຂອງຜູ້ອື່ນ; ນີ້ບໍ່ແມ່ນຄວາມສົກກະປົກທີ່ແທ້ຈິງຂອງມະນຸດບໍ? ເຖິງແມ່ນວ່າ ເຮົາບໍ່ໄດ້ປະສົບກັບຊີວິດໃນທ່າມກາງມະນຸດ ແລະ ບໍ່ໄດ້ປະສົບກັບຊີວິດຂອງມະນຸດຢ່າງແທ້ຈິງ ແຕ່ເຮົາມີຄວາມເຂົ້າໃຈທີ່ຊັດເຈນຫຼາຍກ່ຽວກັບທຸກການເຄື່ອນໄຫວ, ທຸກການປະຕິບັດ, ທຸກຖ້ອຍຄຳ ແລະ ທຸກການກະທຳຂອງມະນຸດ. ເຮົາເຖິງກັບສາມາດເປີດໂປງຄວາມອັບອາຍທີ່ສຸດຂອງມະນຸດ ຈົນເຖິງຂັ້ນທີ່ພວກເຂົາບໍ່ກ້າທີ່ຈະເປີດເຜີຍການເຮັດຜິດຢ່າງລັບໆຂອງພວກເຂົາເອງ ຫຼື ຍອມຕໍ່ຕັນຫາຂອງພວກເຂົາ. ພວກເຂົາບໍ່ກ້າທີ່ຈະເປີດເຜີຍສະພາບທີ່ຂີ້ຮ້າຍຂອງພວກເຂົາອີກຕໍ່ໄປຄືກັນກັບຫອຍທີ່ຖອຍເຂົ້າເປືອກຂອງພວກມັນ. ຍ້ອນມະນຸດບໍ່ຮູ້ຈັກຕົວເອງ, ຂໍ້ຜິດພາດອັນໃຫຍ່ຫຼວງທີ່ສຸດຂອງພວກເຂົາຈຶ່ງແມ່ນຄວາມເຕັມໃຈທີ່ຈະອວດອ້າງສະເໜ່ຂອງພວກເຂົາຕໍ່ໜ້າຄົນອື່ນ ໂດຍອວດໃບໜ້າທີ່ຂີ້ຮ້າຍຂອງພວກເຂົາ; ນີ້ແມ່ນສິ່ງທີ່ພຣະເຈົ້າກຽດຊັງທີ່ສຸດ. ນີ້ກໍຍ້ອນວ່າ ຄວາມສຳພັນລະຫວ່າງຜູ້ຄົນແມ່ນຜິດປົກກະຕິ ແລະ ຄວາມສຳພັນລະຫວ່າງບຸກຄົນແບບປົກກະຕິຂອງຜູ້ຄົນກໍຂາດຫາຍໄປ, ແລ້ວນັບປະສາຫຍັງກັບຄວາມສຳພັນແບບປົກກະຕິລະຫວ່າງພວກເຂົາ ແລະ ພຣະເຈົ້າ. ພຣະເຈົ້າໄດ້ກ່າວຫຼາຍຢ່າງ ແລະ ໃນການເຮັດເຊັ່ນນັ້ນ ວັດຖຸປະສົງຫຼັກຂອງພຣະອົງກໍເພື່ອໃຫ້ມີພື້ນທີ່ໃນຫົວໃຈຂອງຜູ້ຄົນ ເພື່ອວ່າ ພວກເຂົາຈະສາມາດກຳຈັດພະທຽມທີ່ຢູ່ໃນຫົວໃຈຂອງພວກເຂົາ. ຫຼັງຈາກນັ້ນ, ພຣະເຈົ້າກໍຈະສາມາດໃຊ້ອຳນາດເໜືອມະນຸດທຸກຄົນ ແລະ ບັນລຸຈຸດປະສົງຂອງການມີຢູ່ຂອງພຣະອົງຢູ່ເທິງແຜ່ນດິນໂລກ.

# ບົດທີ 15

ຄວາມແຕກຕ່າງທີ່ຍິ່ງໃຫຍ່ທີ່ສຸດລະຫວ່າງພຣະເຈົ້າ ແລະ ມະນຸດກໍຄື ພຣະທຳຂອງພຣະເຈົ້າແມ່ນເຂົ້າກົງໃຈກາງຂອງບັນຫາຢູ່ສະເໝີໂດຍທີ່ບໍ່ປົກປິດບັງຫຍັງ. ສະນັ້ນ, ດ້ານນີ້ຂອງອຸປະນິໄສຂອງພຣະເຈົ້າຈຶ່ງສາມາດເຫັນໄດ້ໃນປະໂຫຍກທຳອິດຂອງມື້ນີ້. ມັນເປີດໂປງທາດແທ້ຂອງມະນຸດທັນທີ ແລະ ສະແດງໃຫ້ເຫັນອຸປະນິໄສຂອງພຣະເຈົ້າຢ່າງເປີດເຜີຍ. ມັນແມ່ນແຫຼ່ງທີ່ມາຂອງຫຼາຍມຸມມອງກ່ຽວກັບຄວາມສາມາດຂອງພຣະທຳຂອງພຣະເຈົ້າໃນການບັນລຸຜົນ. ຢ່າງໃດກໍຕາມ, ຜູ້ຄົນບໍ່ສາມາດເຂົ້າໃຈສິ່ງນີ້ໄດ້; ພວກເຂົາພຽງແຕ່ມາເພື່ອຮູ້ຈັກຕົວເອງຜ່ານພຣະທຳຂອງພຣະເຈົ້າຢູ່ສະເໝີ ໂດຍບໍ່ໄດ້ "ວິເຄາະ" ພຣະເຈົ້າຢ່າງລະອຽດ. ມັນເປັນຄືກັບວ່າ ພວກເຂົາຢ້ານທີ່ຈະລ່ວງເກີນພຣະອົງ ຫຼື ຢ້ານວ່າພຣະອົງຈະຂ້າພວກເຂົາຍ້ອນ "ຄວາມລະມັດລະວັງ" ຂອງພວກເຂົາ. ທີ່ຈິງແລ້ວ ເມື່ອຄົນສ່ວນໃຫຍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ພວກເຂົາເຮັດເຊັ່ນນັ້ນຈາກທັດສະນະທີ່ບໍ່ດີ ແລະ ບໍ່ແມ່ນຈາກທັດສະນະທີ່ດີ. ມັນອາດເວົ້າໄດ້ວ່າ ບັດນີ້ຜູ້ຄົນໄດ້ເລີ່ມ "ເອົາໃຈໃສ່ກັບການຖ່ອມຕົວ ແລະ ການອ່ອນນ້ອມ" ພາຍໃຕ້ການນຳພາຂອງພຣະທຳຂອງພຣະອົງ. ຈາກສິ່ງນີ້ ມັນຈຶ່ງຊັດເຈນວ່າ ຜູ້ຄົນໄດ້ເລີ່ມພັດທະນາຫຼາຍຂຶ້ນ: ຈາກການທີ່ບໍ່ເອົາໃຈໃສ່ພຣະທຳຂອງພຣະອົງຈົນເຖິງຂັ້ນເອົາໃຈໃສ່ພຣະທຳເຫຼົ່ານັ້ນຢ່າງບໍ່ເໝາະສົມ. ຢ່າງໃດກໍຕາມ, ບໍ່ມີແມ່ນແຕ່ຄົນດຽວທີ່ໄດ້ເຂົ້າເຖິງຈາກທັດສະນະທີ່ດີ ແລະ ບໍ່ມີຜູ້ໃດເຄີຍເຂົ້າໃຈເປົ້າໝາຍຂອງພຣະເຈົ້າຢ່າງແທ້ຈິງໃນການໃຫ້ມະນຸດເອົາໃຈໃສ່ກັບພຣະທຳຂອງພຣະອົງ. ມັນເປັນທີ່ຮູ້ຈັກກັນຈາກສິ່ງທີ່ພຣະເຈົ້າກ່າວວ່າ ພຣະອົງບໍ່ຈຳເປັນຕ້ອງປະສົບກັບຊີວິດຂອງຄຣິສຕະຈັກດ້ວຍຕົວເອງ ເພື່ອທີ່ຈະສາມາດເຂົ້າໃຈຢ່າງຖືກຕ້ອງ ແລະ ໂດຍທີ່ບໍ່ມີຂໍ້ຜິດພາດ ກ່ຽວກັບສະພາບຕົວຈິງຂອງທຸກຄົນທີ່ຢູ່ໃນຄຣິສຕະຈັກ. ຍ້ອນພວກເຂົາໄດ້ເຂົ້າສູ່ວິທີການໃໝ່ຢ່າງສຳເລັດ ຜູ້ຄົນຈຶ່ງຍັງບໍ່ໄດ້ກຳຈັດອົງປະກອບທີ່ບໍ່ດີຂອງພວກເຂົາອອກຈາກຕົວພວກເຂົາທັງໝົດເທື່ອ; ກິ່ນອາຍຂອງຊາກສົບຍັງພັດປິວຄ່ອຍໆທົ່ວຄຣິສຕະຈັກ. ມັນເປັນຄືກັບວ່າ ຜູ້ຄົນຫາກໍໄດ້ກິນຢາ ແລະ ຍັງເມົາຢູ່ ໂດຍທີ່ສະຕິຂອງພວກເຂົາຍັງບໍ່ທັນຟື້ນຢ່າງເຕັມທີ່ເທື່ອ. ມັນເປັນຄືກັບວ່າ ພວກເຂົາຍັງຖືກຄວາມຕາຍຂົ່ມຂູ່ຈົນພວກເຂົາບໍ່ສາມາດເອົາຊະນະຕົນເອງໄດ້ເມື່ອຍັງຢູ່ໃນທ່າມກາງຄວາມຢ້ານກົວຈົນ. "ມະນຸດລ້ວນແລ້ວແຕ່ເປັນສິ່ງມີຊີວິດທີ່ບໍ່ມີຄວາມຮູ້ກ່ຽວກັບຕົວເອງ": ວິທີການກ່າວຖ້ອຍຄຳນີ້ແມ່ນຍັງອີງໃສ່ການສ້າງຄຣິສຕະຈັກ. ເຖິງແມ່ນວ່າໃນຄວາມເປັນຈິງແລ້ວ ທຸກຄົນໃນຄຣິສຕະຈັກຈະເອົາໃຈໃສ່ກັບພຣະທຳຂອງພຣະເຈົ້າ ແຕ່ທຳມະຊາດຂອງພວກເຂົາຍັງຄົງຝັງແໜ້ນຢ່າງເລິກເຊິ່ງ ແລະ ຖອນອອກບໍ່ໄດ້. ນີ້ຄືເຫດຜົນທີ່ພຣະເຈົ້າໄດ້ກ່າວດ້ວຍວິທີທີ່ພຣະອົງກ່າວໃນຂັ້ນຕອນທີ່ຜ່ານມາເພື່ອພິພາກສາຜູ້ຄົນ, ເພື່ອວ່າພວກເຂົາອາດຈະຍອມໃຫ້ພຣະທຳຂອງພຣະອົງຕີຢ່າງແຮງໃນທ່າມກາງຄວາມພາກພູມໃຈຂອງພວກເຂົາ. ເຖິງແມ່ນວ່າຜູ້ຄົນຈະປະສົບກັບການຫຼົ່ຫຼອມເປັນເວລາຫ້າເດືອນໃນຂຸມທີ່ເລິກທີ່ສຸດ ແຕ່ສະພາບຕົວຈິງຂອງພວກເຂົາຍັງແມ່ນສະພາບທີ່ບໍ່ຮູ້ຈັກພຣະເຈົ້າ. ພວກເຂົາຍັງເສເພ; ພວກເຂົາພຽງແຕ່ກາຍເປັນຄົນທີ່ຂ້ອນຂ້າງລະວັງຕົວຈາກພຣະເຈົ້າ. ຂັ້ນຕອນນີ້ແມ່ນຂັ້ນຕອນທຳອິດທີ່ຖືກຕ້ອງທີ່ຜູ້ຄົນ

ໃຊ້ຢູ່ເສັ້ນທາງໃນການຮູ້ຈັກພຣະທຳຂອງພຣະເຈົ້າ; ສະນັ້ນ, ໃນການເຊື່ອມຕໍ່ແກ່ນແທ້ຂອງພຣະທຳຂອງພຣະເຈົ້າ ມັນຈຶ່ງບໍ່ຍາກທີ່ຈະເຫັນວ່າ ພາລະກິດໃນພາກສ່ວນຜ່ານມາໄດ້ປູທາງໃຫ້ກັບປັດຈຸບັນ ແລະ ມີແຕ່ຕອນນີ້ເທົ່ານັ້ນ ທີ່ທຸກສິ່ງຖືກເຮັດໃຫ້ເປັນປົກກະຕິ. ຄວາມອ່ອນແອທີ່ຮ້າຍແຮງທີ່ສຸດຂອງຜູ້ຄົນແມ່ນແນວໂນ້ມຂອງພວກເຂົາທີ່ຈະແຍກພຣະວິນຍານຂອງພຣະເຈົ້າອອກຈາກຕົວຕົນທີ່ເປັນເນື້ອໜັງຂອງພຣະອົງ ເພື່ອໄດ້ຮັບຄວາມເປັນອິດສະຫຼະແບບສ່ວນຕົວ ແລະ ຫຼີກເວັ້ນການຈຳກັດຢູ່ຕະຫຼອດເວລາ. ນີ້ແມ່ນເຫດຜົນທີ່ພຣະເຈົ້າພັນລະນາມະນຸດວ່າ ເປັນຄືນົກນ້ອຍທີ່ "ບິນໄປມາຢ່າງລ່າເລີງ". ນີ້ແມ່ນສະພາບຕົວຈິງຂອງມະນຸດຊາດທັງໝົດ. ມັນແມ່ນສິ່ງທີ່ເຮັດໃຫ້ຜູ້ຄົນທັງໝົດຖືກໂຄ່ນລົ້ມໄດ້ງ່າຍທີ່ສຸດ ແລະ ມັນແມ່ນບ່ອນທີ່ພວກເຂົາມີແນວໂນ້ມຫຼາຍທີ່ສຸດທີ່ຈະສູນເສຍແນວທາງຂອງພວກເຂົາ. ມັນຊັດເຈນໃນສິ່ງນີ້ວ່າ ພາລະກິດຂອງຊາຕານໃນທ່າມກາງມະນຸດຊາດບໍ່ມີຫຍັງຫຼາຍໄປກວ່າພາລະກິດນີ້. ຍິ່ງຊາຕານເຮັດສິ່ງນີ້ໃນຜູ້ຄົນ ຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ພວກເຂົາກໍຍິ່ງເຂັ້ມງວດຂຶ້ນ. ພຣະອົງຕ້ອງການໃຫ້ຜູ້ຄົນອຸທິດຄວາມສົນໃຈຂອງພວກເຂົາໃສ່ພຣະທຳຂອງພຣະອົງ ໃນຂະນະທີ່ຊາຕານພະຍາຍາມຢ່າງໜັກເພື່ອລະເມີດພຣະທຳ. ຢ່າງໃດກໍຕາມ, ພຣະເຈົ້າໄດ້ເຕືອນຜູ້ຄົນຕະຫຼອດວ່າ ໃຫ້ເອົາໃຈໃສ່ພຣະທຳຂອງພຣະອົງຫຼາຍຂຶ້ນ; ນີ້ແມ່ນຈຸດດຸເດືອດຂອງສົງຄາມທີ່ກຳລັງຕໍ່ສູ້ກັນໃນໂລກແຫ່ງວິນຍານ. ມັນສາມາດເວົ້າດ້ວຍວິທີນີ້ວ່າ: ສິ່ງທີ່ພຣະເຈົ້າຕ້ອງການປະຕິບັດໃນມະນຸດແມ່ນສິ່ງທີ່ຊາຕານຕ້ອງການທຳລາຍຢ່າງແນ່ນອນ ແລະ ສິ່ງທີ່ຊາຕານຕ້ອງການທຳລາຍແມ່ນສະແດງອອກຜ່ານມະນຸດ ໂດຍບໍ່ໄດ້ຖືກປົກບັງຫຍັງເລີຍ. ມີຕົວຢ່າງທີ່ຊັດເຈນກ່ຽວກັບສິ່ງທີ່ພຣະເຈົ້າປະຕິບັດໃນຜູ້ຄົນ: ສະພາບຂອງພວກເຂົາກຳລັງດີຂຶ້ນ ແລະ ດີຂຶ້ນ. ມີການສະແດງອອກທີ່ຊັດເຈນກ່ຽວກັບການທຳລາຍລ້າງຂອງຊາຕານໃນມະນຸດເຊັ່ນກັນ: ພວກເຂົາເສື່ອມຊາມຫຼາຍຂຶ້ນ ແລະ ຫຼາຍຂຶ້ນ ແລະ ສະພາບຂອງພວກເຂົາແມ່ນກຳລັງຈົມເລິກລົງ. ທັນທີທີ່ສະພາບຂອງພວກເຂົາຮ້າຍແຮງພໍສົມຄວນ ພວກເຂົາກໍຈະມີແນວໂນ້ມທີ່ຈະຖືກຊາຕານຈັບຕົວໄປ. ນີ້ແມ່ນສະພາບຕົວຈິງຂອງຄຣິສຕະຈັກ ຕາມທີ່ສະເໜີໃນພຣະທຳຂອງພຣະເຈົ້າ ແລະ ມັນແມ່ນສະພາບຕົວຈິງຂອງໂລກແຫ່ງວິນຍານເຊັ່ນກັນ. ມັນແມ່ນການສະທ້ອນຂອງພະລັງຂອງໂລກແຫ່ງວິນຍານ. ຖ້າຜູ້ຄົນບໍ່ມີຄວາມໝັ້ນໃຈທີ່ຈະຮ່ວມມືກັບພຣະເຈົ້າ ພວກເຂົາກໍຈະມີອັນຕະລາຍທີ່ຈະຖືກຊາຕານຈັບຕົວໄປ. ນີ້ແມ່ນຄວາມຈິງ. ຖ້າຜູ້ຄົນມີຄວາມສາມາດຢ່າງແທ້ຈິງໃນການຖວາຍຫົວໃຈທັງໝົດໃຫ້ພຣະເຈົ້າຄອບຄອງ, ນັ້ນກໍເປັນດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ: "ເມື່ອຢູ່ຕໍ່ໜ້າເຮົາ, ພວກເຂົາແມ່ນເບິ່ງຄືວ່າ ຢູ່ໃນອ້ອມກອດຂອງເຮົາ ແລະ ຊີມຄວາມອົບອຸ່ນຂອງມັນ". ນີ້ສະແດງໃຫ້ເຫັນວ່າ ຄວາມຕ້ອງການຂອງພຣະເຈົ້າຕໍ່ມະນຸດແມ່ນບໍ່ໄດ້ສູງ; ພຣະອົງພຽງແຕ່ຕ້ອງການໃຫ້ພວກເຂົາລຸກຂຶ້ນ ແລະ ຮ່ວມມືກັບພຣະອົງເທົ່ານັ້ນ. ນີ້ບໍ່ແມ່ນສິ່ງທີ່ງ່າຍ ແລະ ມີຄວາມສຸກບໍ? ນີ້ແມ່ນສິ່ງດຽວທີ່ໄດ້ເຮັດໃຫ້ວິລະບູລຸດ ແລະ ມະນຸດທີ່ຍິ່ງໃຫຍ່ທຸກຄົນມີຄວາມສັບສົນບໍ? ມັນເປັນຄືກັບວ່າ ນາຍພົນຖືກຖອນອອກຈາກສະໜາມຮົບ ແລະ ໃຫ້ໄປຖັກແຊ່ວແທນ. "ວິລະບູລຸດ" ເຫຼົ່ານີ້ເປັນອຳມະພາດໂດຍຄວາມຍາກລຳບາກ ແລະ ພວກເຂົາບໍ່ຮູ້ວ່າຈະເຮັດແນວໃດ.

ດ້ານໃດກໍຕາມທີ່ດີທີ່ສຸດ ກ່ຽວກັບຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ມະນຸດ, ນັ້ນແມ່ນດ້ານທີ່ຊາຕານຈະໂຈມຕີຕໍ່ມະນຸດຮຸນແຮງຫຼາຍທີ່ສຸດ ແລະ ດ້ວຍເຫດນັ້ນ ສະພາບຂອງທຸກຄົນກໍຈະຖືກເປີດໂປງຕາມນັ້ນ. "ຜູ້ໃດໃນບັນດາພວກເຈົ້າທີ່ກໍາລັງຢືນຢູ່ຕໍ່ໜ້າເຮົາ ທີ່ກໍາລັງຢືນຢູ່ຕໍ່ໜ້າເຮົາທີ່ຂາວດັ່ງຫິມະບໍລິສຸດ ແລະ ບໍ່ມີມົນທິນດັ່ງແກ້ວຢົກ?" ທຸກຄົນຍັງອ້ອນວອນພຣະເຈົ້າ ແລະ ປິດບັງສິ່ງຕ່າງໆຈາກພຣະອົງ; ພວກເຂົາຍັງປະຕິບັດແຜນການພິເສດຂອງພວກເຂົາເອງ. ພວກເຂົາບໍ່ໄດ້ເອົາຫົວໃຈທັງໝົດຂອງພວກເຂົາໃສ່ໃນມືຂອງພຣະເຈົ້າເພື່ອເຮັດໃຫ້ພຣະອົງພໍໃຈ ແຕ່ພວກເຂົາກໍປາຖະໜາທີ່ຈະໄດ້ຮັບລາງວັນຈາກພຣະອົງດ້ວຍຄວາມກະຕືລືລົ້ນ. ເມື່ອຜູ້ຄົນກິນອາຫານທີ່ແຊບ ພວກເຂົາກໍບໍ່ສົນໃຈພຣະເຈົ້າ, ປະໃຫ້ພຣະອົງຢືນຢູ່ບ່ອນນັ້ນ ແລະ ລໍຖ້າທີ່ຈະຖືກ "ຈັດການ"; ເມື່ອຜູ້ຄົນມີເຄື່ອງນຸ່ງທີ່ງາມພວກເຂົາກໍຢືນຢູ່ບ່ອນນັ້ນ ຢູ່ຕໍ່ໜ້າແວ່ນ ໂດຍມີຄວາມສຸກກັບຄວາມງາມຂອງພວກເຂົາເອງ ແລະເລິກໆໃນໃຈຂອງພວກເຂົາ ພວກເຂົາກໍບໍ່ໄດ້ເຮັດໃຫ້ພຣະເຈົ້າພໍໃຈ. ເມື່ອພວກເຂົາມີຖານະ ແລະ ເມື່ອພວກເຂົາມີຄວາມສຸກທີ່ສຸກສະບາຍຫຼາຍ ພວກເຂົາກໍນັ່ງຢູ່ເທິງສະຖານະຂອງພວກເຂົາ ແລະ ເລີ່ມມີຄວາມສຸກກັບມັນ ແຕ່ບໍ່ໄດ້ອ່ອນນ້ອມຕົວເອງຍ້ອນການຍົກຂຶ້ນຂອງພຣະເຈົ້າ. ກົງກັນຂ້າມ, ພວກເຂົາຢືນຢູ່ໃນບ່ອນສູງຂອງພວກເຂົາ ໂດຍກ່າວຄໍາເວົ້າທີ່ສູງສົ່ງຂອງພວກເຂົາ ແລະ ບໍ່ສົນໃຈການສະຖິດຢູ່ຂອງພຣະເຈົ້າ ຫຼື ພວກເຂົາບໍ່ສະແຫວງຫາທີ່ຈະຮູ້ຈັກຄວາມລໍ້າຄ່າຂອງພຣະອົງ. ເມື່ອຜູ້ຄົນມີຮູບບູຊາໃນຫົວໃຈຂອງພວກເຂົາ ຫຼື ເມື່ອຫົວໃຈຂອງພວກເຂົາຖືກຄົນອື່ນຍຶດໄປ ມັນກໍໝາຍຄວາມວ່າພວກເຂົາໄດ້ປະຕິເສດການສະຖິດຢູ່ຂອງພຣະເຈົ້າແລ້ວ ຄືກັບວ່າ ພຣະອົງເປັນຜູ້ບຸກລຸກຫົວໃຈຂອງພວກເຂົາ. ພວກເຂົາຢ້ານວ່າ ພຣະເຈົ້າຈະລັກເອົາຄວາມຮັກຂອງຜູ້ອື່ນທີ່ມີຕໍ່ພວກເຂົາ ແລະ ຢ້ານວ່າຫຼັງຈາກນັ້ນພວກເຂົາຈະຮູ້ສຶກໂດດດ່ຽວ. ເຈດຕະນາເດີມຂອງພຣະເຈົ້າກໍຄື ບໍ່ມີສິ່ງໃດທີ່ຢູ່ແຜ່ນດິນໂລກຄວນເຮັດໃຫ້ຜູ້ຄົນບໍ່ເອົາໃຈໃສ່ພຣະອົງ ແລະ ເຖິງວ່າອາດຈະມີຄວາມຮັກລະຫວ່າງຜູ້ຄົນ ແຕ່ພຣະເຈົ້າບໍ່ສາມາດຖືກຂັບໄລ່ອອກຈາກ "ຄວາມຮັກ" ນີ້ໄດ້. ທຸກສິ່ງທີ່ເປັນທາງໂລກແມ່ນວ່າງເປົ່າ, ແມ່ນແຕ່ຄວາມຮູ້ສຶກລະຫວ່າງຜູ້ຄົນທີ່ບໍ່ສາມາດແນມເຫັນ ແລະ ສໍາຜັດໄດ້. ຖ້າບໍ່ມີການມີຢູ່ຂອງພຣະເຈົ້າ, ທຸກສັບພະສິ່ງຈະກັບຄືນສູ່ສະພາບທີ່ບໍ່ມີຫຍັງ. ຢູ່ແຜ່ນດິນໂລກ ທຸກຄົນມີສິ່ງຕ່າງໆທີ່ພວກເຂົາຮັກ ແຕ່ບໍ່ມີຜູ້ໃດເຄີຍເອົາພຣະທໍາຂອງພຣະເຈົ້າມາເປັນສິ່ງນັ້ນທີ່ພວກເຂົາຮັກ. ສິ່ງນີ້ກໍານົດລະດັບຄວາມເຂົ້າໃຈຂອງຜູ້ຄົນຕໍ່ພຣະທໍາຂອງພຣະອົງ. ເຖິງແມ່ນວ່າພຣະທໍາຂອງພຣະອົງຈະໂຫດຮ້າຍ ແຕ່ກໍບໍ່ມີຜູ້ໃດຖືກພຣະທໍາເຫຼົ່ານັ້ນເຮັດໃຫ້ບາດເຈັບ ເນື່ອງຈາກຜູ້ຄົນບໍ່ເອົາໃຈໃສ່ກັບພຣະທໍາເຫຼົ່ານັ້ນຢ່າງແທ້ຈິງ; ກົງກັນຂ້າມ, ພວກເຂົາສັງເກດພຣະທໍາເຫຼົ່ານັ້ນຄືກັບພວກເຂົາສັງເກດເບິ່ງດອກໄມ້. ພວກເຂົາບໍ່ປະຕິບັດຕໍ່ພຣະທໍາຂອງພຣະອົງຄືກັບໝາກໄມ້ທີ່ພວກເຂົາອາດຊີມເອງ, ສະນັ້ນ ພວກເຂົາຈຶ່ງບໍ່ຮູ້ຈັກແກ່ນແທ້ຂອງພຣະທໍາຂອງພຣະເຈົ້າ. "ຖ້າມະນຸດສາມາດເຫັນຄວາມຄົມຂອງດາບຂອງເຮົາຢ່າງແທ້ຈິງ, ພວກເຂົາຈະແລ່ນໜີສູ່ຮູຂອງພວກເຂົາຄືກັບໜູ". ຫຼັງຈາກທີ່ໄດ້ອ່ານພຣະທໍາຂອງພຣະເຈົ້າ, ຄົນໃດໜຶ່ງໃນສະພາບຂອງຄົນປົກກະຕິຈະຕົກໃຈ, ເຕັມໄປດ້ວຍຄວາມອັບອາຍ ແລະ ບໍ່ສາມາດຜະເຊີນໜ້າກັບຜູ້ອື່ນໄດ້. ຢ່າງໃດກໍຕາມ, ໃນທຸກມື້ນີ້ ຜູ້ຄົນແມ່ນກົງກັນຂ້າມຢ່າງສິ້ນເຊີງ. ພວກເຂົາໃຊ້ພຣະທໍາ

ຂອງພຣະເຈົ້າເປັນອາວຸດເພື່ອໂຈມຕີຜູ້ອື່ນ. ພວກເຂົາຈັ່ງແມ່ນບໍ່ຮູ້ອາຍແທ້ໆ!

ພວກເຮົາຖືກນຳມາສູ່ສະພາບຂອງການເປັນຢູ່ນີ້ດ້ວຍພຣະຄຳຂອງພຣະເຈົ້າ: "ພາຍໃນອານາຈັກ, ບໍ່ແມ່ນແຕ່ພຣະຄຳເທົ່ານັ້ນທີ່ຖືກປະກາດອອກມາຈາກປາກຂອງເຮົາ ແຕ່ຕີນຂອງເຮົາກໍຍ່າງໄປທຸກຫົນແຫ່ງທົ່ວທຸກດິນແດນຢ່າງເປັນພິທີ". ໃນສົງຄາມລະຫວ່າງພຣະເຈົ້າ ແລະ ຊາຕານ, ພຣະເຈົ້າກຳລັງຊະນະທຸກຂັ້ນຕອນ. ພຣະອົງກຳລັງຂະຫຍາຍພາລະກິດຂອງພຣະອົງຢ່າງກວ້າງຂວາງໄປທົ່ວຈັກກະວານ ແລະ ມັນສາມາດເວົ້າໄດ້ວ່າ ຢູ່ທຸກບ່ອນແມ່ນມີຮອຍພຣະບາດຂອງພຣະອົງ ແລະ ສັນຍານແຫ່ງໄຊຊະນະຂອງພຣະອົງ. ໃນກົນອຸບາຍຂອງມັນ, ຊາຕານຫວັງທີ່ຈະທຳລາຍການຄຸ້ມຄອງຂອງພຣະເຈົ້າໂດຍການເຮັດໃຫ້ປະເທດຕ່າງໆແຕກແຍກ ແຕ່ພຣະເຈົ້າໄດ້ໃຊ້ປະໂຫຍດຂອງການແຕກແຍກນີ້ ເພື່ອປະຕິຮູບຈັກກະວານທັງໝົດ, ແຕ່ບໍ່ໄດ້ເພື່ອກວາດລ້າງມັນ. ພຣະເຈົ້າເຮັດສິ່ງໃໝ່ທຸກມື້ ແຕ່ຜູ້ຄົນກໍບໍ່ໄດ້ສັງເກດເຫັນ. ພວກເຂົາບໍ່ສົນໃຈພະລັງຂອງໂລກແຫ່ງວິນຍານ, ສະນັ້ນ ພວກເຂົາຈຶ່ງບໍ່ສາມາດເຫັນພາລະກິດໃໝ່ຂອງພຣະເຈົ້າ. "ພາຍໃນຈັກກະວານ, ທຸກສິ່ງເຫຼື້ອມໃສຄືກັບສິ່ງໃໝ່ຢູ່ໃນຄວາມເປັ່ງປະກາຍແຫ່ງສະຫງ່າລາສີຂອງເຮົາ, ສະແດງເຖິງຄວາມອົບອຸ່ນໃຈທີ່ເຮັດໃຫ້ຮູ້ສຶກຫຼົງໄຫຼ ແລະ ເຮັດໃຫ້ຈິດໃຈຜູ້ຄົນເບີກບານ ຄືກັບວ່າ ໃນປັດຈຸບັນນີ້ ມັນຢູ່ໃນສະຫວັນທີ່ເໜືອສະຫວັນ ຕາມຄວາມຄິດໃນຈິນຕະນາການຂອງມະນຸດ, ບໍ່ຖືກບຽດບຽນໂດຍຊາຕານ ແລະ ເປັນອິດສະຫຼະຈາກການໂຈມຕີຂອງສັດຕູພາຍນອກ". ສິ່ງນີ້ບອກລ່ວງໜ້າເຖິງພາບແຫ່ງຄວາມສຸກຂອງອານາຈັກແຫ່ງພຣະຄຣິດຢູ່ແຜ່ນດິນໂລກ ແລະ ມັນຍັງແນະນຳສະຖານະການຂອງສະຫວັນຊັ້ນສາມໃຫ້ກັບມະນຸດຊາດເຊັ່ນກັນ: ມີແຕ່ສິ່ງບໍລິສຸດທີ່ເປັນຂອງພຣະເຈົ້າຢູ່ໃນບ່ອນນັ້ນ ໂດຍປາສະຈາກການໂຈມຕີຂອງກອງກຳລັງຂອງຊາຕານ. ແຕ່ສິ່ງທີ່ສຳຄັນທີ່ສຸດແມ່ນການອະນຸຍາດໃຫ້ຜູ້ຄົນເຫັນສະຖານະການຂອງພາລະກິດຢູ່ແຜ່ນດິນໂລກຂອງພຣະເຈົ້າເອງ: ສະຫວັນແມ່ນສະຫວັນໃໝ່ ແລະ ໃນທຳນອງດຽວກັນນັ້ນ ຕໍ່ມາແຜ່ນດິນໂລກກໍຖືກສ້າງໃໝ່. ຍ້ອນນີ້ແມ່ນຊີວິດພາຍໃຕ້ການນຳພາຂອງພຣະເຈົ້າເອງ ຜູ້ຄົນຈຶ່ງມີຄວາມສຸກໂດຍທີ່ບໍ່ສາມາດວັດແທກໄດ້. ໃນການຮັບຮູ້ຂອງພວກເຂົາ, ຊາຕານແມ່ນ "ນັກໂທດ" ຂອງມະນຸດຊາດ ແລະ ພວກເຂົາບໍ່ຢຳເກງ ຫຼື ບໍ່ຢ້ານເຖິງການມີຢູ່ຂອງມັນເລີຍ. ຍ້ອນການແນະນຳ ແລະ ການນຳພາໂດຍກົງຈາກຜູ້ສັກສິດ, ແຜນຂອງຊາຕານທັງໝົດກໍບໍ່ມີປະໂຫຍດຫຍັງ ແລະ ສິ່ງນີ້ກໍຍິ່ງພຽງພໍທີ່ຈະພິສູດໃຫ້ເຫັນວ່າ ຊາຕານບໍ່ໄດ້ມີຕົວຕົນອີກຕໍ່ໄປ ເຊິ່ງຖືກພາລະກິດຂອງພຣະເຈົ້າທຳລາຍລ້າງ. ນີ້ແມ່ນເຫດຜົນທີ່ມີການກ່າວວ່າ: "ຢູ່ໃນສະຫວັນທີ່ເໜືອສະຫວັນ". ເມື່ອພຣະເຈົ້າກ່າວວ່າ: "ບໍ່ເຄີຍເກີດມີການລົບກວນໃດໆ ຫຼື ຈັກກະວານບໍ່ເຄີຍຖືກແບ່ງແຍກ" ພຣະອົງແມ່ນໝາຍເຖິງສະພາບຂອງໂລກແຫ່ງວິນຍານ. ນີ້ແມ່ນຫຼັກຖານພິສູດວ່າ ພຣະເຈົ້າປະກາດໄຊຊະນະຕໍ່ຊາຕານ ແລະ ມັນແມ່ນສັນຍານບອກເຖິງໄຊຊະນະຄັ້ງສຸດທ້າຍຂອງພຣະເຈົ້າ. ບໍ່ມີມະນຸດຜູ້ໃດສາມາດປ່ຽນແປງຈິດໃຈຂອງພຣະເຈົ້າໄດ້ ຫຼື ບໍ່ມີຜູ້ໃດສາມາດຮູ້ຈັກສິ່ງນີ້ໄດ້. ເຖິງວ່າຜູ້ຄົນຈະໄດ້ອ່ານພຣະທຳຂອງພຣະເຈົ້າ ແລະ ສຳຫຼວດສິ່ງເຫຼົ່ານັ້ນດ້ວຍຄວາມຈິງຈັງ ແຕ່ພວກເຂົາກໍຍັງບໍ່ສາມາດສະແດງເຖິງທາດແທ້ຂອງພວກເຂົາໄດ້. ຍົກຕົວຢ່າງ, ພຣະເຈົ້າໄດ້ກ່າວວ່າ: "ເຮົາບິນໄປມາເໜືອດວງດາວ ແລະ ເມື່ອດວງຕາເວັນກະຈາຍ

ແສງຂອງມັນອອກມາ, ເຮົາກໍປົດບັງຄວາມອົບອຸ່ນນັ້ນ ໂດຍສິ່ງກ້ອນຫິມະທີ່ໃຫຍ່ສໍາລັບຂົນຫ່ານລອຍລົງຈາກມືຂອງເຮົາ. ເມື່ອເຮົາປ່ຽນໃຈຂອງເຮົາ ຫິມະທັງໝົດນັ້ນກໍລະລາຍສູ່ແມ່ນໍ້າ ແລະ ໃນທັນໃດນັ້ນ, ລະດູໃບໄມ້ປົ່ງກໍເກີດຂຶ້ນຢູ່ທຸກຫົນແຫ່ງພາຍໃຕ້ທ້ອງຟ້າ ແລະ ສີຂຽວມໍລະກົດກໍປ່ຽນພູມມີປະເທດທັງໝົດຢູ່ເທິງແຜ່ນດິນໂລກ". ເຖິງຜູ້ຄົນອາດຈະສາມາດຈິນຕະນາການພຣະທໍາເຫຼົ່ານີ້ໃນຈິດໃຈຂອງພວກເຂົາ ແຕ່ເຈດຕະນາຂອງພຣະເຈົ້າກໍບໍ່ໄດ້ງ່າຍປານນັ້ນ. ເມື່ອທຸກຄົນທີ່ຢູ່ໃຕ້ສະຫວັນຢູ່ໃນຄວາມມືດມົວ ພຣະເຈົ້າຈຶ່ງໄດ້ກ່າວສຽງແຫ່ງຄວາມລອດພົ້ນເພື່ອປຸກຫົວໃຈຂອງຜູ້ຄົນ. ຢ່າງໃດກໍຕາມ, ຍ້ອນໄພພິບັດທຸກປະເພດໄດ້ເກີດຂຶ້ນກັບພວກເຂົາ ພວກເຂົາຈຶ່ງຮູ້ສຶກເຖິງຄວາມເປົ່າປ່ຽວຂອງໂລກ, ດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງສະແຫວງຫາຄວາມຕາຍ ແລະ ມີຊີວິດຢູ່ໃນຖໍ້າທີ່ເຢືອກເຢັນ ແລະ ເປັນນໍ້າກ້ອນ. ຄວາມເຢັນຂອງພາຍຸຫິມະໃຫຍ່ໄດ້ເຮັດໃຫ້ພວກເຂົາແຂງເປັນນໍ້າກ້ອນ ຈົນເຖິງຂັ້ນທີ່ພວກເຂົາບໍ່ສາມາດຢູ່ລອດໄດ້ຍ້ອນການຂາດຄວາມອົບອຸ່ນຢູ່ແຜ່ນດິນໂລກ. ມັນເປັນຍ້ອນຄວາມເສື່ອມຊາມຂອງຜູ້ຄົນ ພວກເຂົາຈຶ່ງຂ້າກັນເອງຢ່າງໂຫດຮ້າຍຫຼາຍຂຶ້ນ ແລະ ຫຼາຍຂຶ້ນ. ໃນຄຣິສຕະຈັກຜູ້ຄົນສ່ວນໃຫຍ່ຈະຖືກມັງກອນແດງທີ່ຍິ່ງໃຫຍ່ກືນກິນພາຍໃນຄໍາດຽວ. ຫຼັງຈາກການທົດລອງທັງໝົດໄດ້ຜ່ານພົ້ນໄປ, ການຂັດຂວາງຂອງຊາຕານກໍຈະຖືກກໍາຈັດ. ໃນທ່າມກາງການປ່ຽນແປງ, ລະດູໃບໄມ້ປົ່ງຈະຊຶມເຂົ້າໂລກທັງໝົດ, ຄວາມອົບອຸ່ນຈະກວມເອົາແຜ່ນດິນໂລກ ແລະ ໂລກຈະເຕັມໄປດ້ວຍພະລັງ. ສິ່ງເຫຼົ່ານີ້ແມ່ນທຸກຂັ້ນຕອນຂອງແຜນການຄຸ້ມຄອງທັງໝົດ. "ກາງຄືນ" ທີ່ພຣະເຈົ້າກ່າວເຖິງແມ່ນໝາຍເຖິງເວລາທີ່ຄວາມບ້າປ່ວງຂອງຊາຕານເຖິງຈຸດຮ້າຍແຮງທີ່ສຸດ ເຊິ່ງຈະເກີດຂຶ້ນໃນຕອນກາງຄືນ. ນັ້ນບໍ່ແມ່ນສິ່ງທີ່ກໍາລັງເກີດຂຶ້ນໃນຕອນນີ້ບໍ? ເຖິງວ່າທຸກຄົນຈະລອດພົ້ນພາຍໃຕ້ການນໍາພາຂອງແສງສະຫວ່າງຂອງພຣະເຈົ້າ ແຕ່ພວກເຂົາກໍຖືກເຮັດໃຫ້ຜ່ານຄວາມທຸກຍາກຂອງຄວາມມືດຂອງກາງຄືນ. ຖ້າພວກເຂົາບໍ່ສາມາດໜີຈາກການຜູກມັດຂອງຊາຕານ ພວກເຂົາກໍຈະມີຊີວິດໃນທ່າມກາງກາງຄືນທີ່ມືດຕະຫຼອດການ. ຈົ່ງເບິ່ງປະເທດຕ່າງໆຢູ່ເທິງແຜ່ນດິນໂລກ: ຍ້ອນຂັ້ນຕອນຂອງພາລະກິດຂອງພຣະເຈົ້າ, ປະເທດຕ່າງໆຢູ່ແຜ່ນດິນໂລກຈຶ່ງກໍາລັງ "ແລ່ນໄປມາ" ແລະ ແຕ່ລະປະເທດກໍກໍາລັງ "ຊອກຫາປາຍທາງທີ່ເໝາະສົມຂອງຕົນ". ຍ້ອນມື້ຂອງພຣະເຈົ້າຍັງບໍ່ໄດ້ມາເຖິງ ທຸກຢ່າງຢູ່ແຜ່ນດິນໂລກຈຶ່ງຍັງຢູ່ໃນສະພາບຄວາມປັ່ນປ່ວນວຸ້ນວາຍ ເມື່ອພຣະອົງປາກົດຕໍ່ຈັກກະວານທັງໝົດຢ່າງເປີດເຜີຍ, ສະຫງ່າລາສີຂອງພຣະອົງກໍຈະເຕີມເຕັມພູເຂົາຊີໂອນ ແລະ ທຸກສິ່ງຈະເປັນລະບຽບ ແລະ ຮຽບຮ້ອຍເນື່ອງຈາກສິ່ງເຫຼົ່ານັ້ນຈະຖືກຈັດຕຽມໂດຍມືຂອງພຣະອົງ. ພຣະທໍາຂອງພຣະເຈົ້າບໍ່ພຽງແຕ່ກ່າວເຖິງປັດຈຸບັນເທົ່ານັ້ນ ແຕ່ຍັງທໍານາຍລ່ວງໜ້າເຖິງອະນາຄົດ. ປັດຈຸບັນແມ່ນພື້ນຖານຂອງອະນາຄົດ ເຊິ່ງດ້ວຍເຫດນັ້ນ ໃນປັດຈຸບັນຈຶ່ງ ບໍ່ມີຜູ້ໃດສາມາດເຂົ້າໃຈພຣະຄໍາຂອງພຣະເຈົ້າໄດ້ຢ່າງຄົບຖ້ວນ. ຫຼັງຈາກພຣະທໍາຂອງພຣະອົງຖືກເຮັດໃຫ້ສໍາເລັດເທົ່ານັ້ນ ມະນຸດຈຶ່ງຈະສາມາດເຂົ້າໃຈພຣະທໍາເຫຼົ່ານັ້ນທັງໝົດ.

ພຣະວິນຍານຂອງພຣະເຈົ້າເຕີມເຕັມອາວະກາດທັງໝົດໃນຈັກກະວານ ແຕ່ພຣະອົງປະຕິບັດພາລະກິດພາຍໃນທຸກຄົນເຊັ່ນກັນ. ດ້ວຍເຫດນັ້ນ ໃນຫົວໃຈຂອງຜູ້ຄົນ ມັນຈຶ່ງເປັນຄືກັບວ່າ ຮູບຮ່າງຂອງພຣະເຈົ້າແມ່ນຢູ່ທຸກບ່ອນ ແລະ ຢູ່ທຸກບ່ອນແມ່ນມີພາລະກິດຂອງພຣະວິນຍານຂອງພຣະອົງ.

ແນ່ນອນຢູ່ແລ້ວວ່າ ຈຸດປະສົງຂອງການປາກົດຕົວຂອງພຣະເຈົ້າໃນເນື້ອໜັງແມ່ນເພື່ອເອົາຊະນະຕົວຢ່າງເຫຼົ່ານີ້ຂອງຊາຕານ ແລະ ໃນທີ່ສຸດ ກໍເພື່ອຮັບເອົາສິ່ງເຫຼົ່ານັ້ນ. ຢ່າງໃດກໍຕາມ, ໃນຂະນະທີ່ປະຕິບັດພາລະກິດໃນເນື້ອໜັງ ພຣະວິນຍານຍັງໄດ້ຮ່ວມມືກັບເນື້ອໜັງເຊັ່ນກັນ ເພື່ອປ່ຽນແປງຜູ້ຄົນເຫຼົ່ານີ້. ມັນອາດເວົ້າໄດ້ວ່າ ການກະທຳຂອງພຣະເຈົ້າແມ່ນຂະຫຍາຍໄປທົ່ວໂລກ ແລະ ພຣະວິນຍານຂອງພຣະອົງແມ່ນເຕີມເຕັມຈັກກະວານທັງໝົດ ແຕ່ຍ້ອນຂັ້ນຕອນຂອງພາລະກິດຂອງພາລະກິດຂອງພຣະອົງ ຜູ້ທີ່ເຮັດຊົ່ວຈຶ່ງບໍ່ໄດ້ຖືກລົງໂທດ ໃນຂະນະທີ່ຜູ້ທີ່ເຮັດດີບໍ່ໄດ້ຮັບລາງວັນ. ສະນັ້ນ, ການກະທຳຂອງພຣະອົງຈຶ່ງບໍ່ໄດ້ຮັບການສັນລະເສີນ ຈາກທຸກຄົນຢູ່ເທິງແຜ່ນດິນໂລກ. ພຣະອົງທັງຢູ່ເໜືອ ແລະ ຢູ່ພາຍໃນທຸກສິ່ງ; ຍິ່ງໄປກວ່ານັ້ນ ພຣະອົງຢູ່ໃນທ່າມກາງທຸກຄົນ. ສິ່ງນີ້ພຽງພໍທີ່ຈະສະແດງໃຫ້ເຫັນວ່າພຣະເຈົ້າມີຢູ່ແທ້ຈິງ. ຍ້ອນພຣະອົງບໍ່ໄດ້ປາກົດຕໍ່ມະນຸດທຸກຄົນຢ່າງເປີດເຜີຍ ພວກເຂົາຈຶ່ງມີຄວາມເຂົ້າໃຈຜິດເຊັ່ນ: "ສຳລັບມະນຸດແລ້ວ ເບິ່ງຄືວ່າ ເຮົາມີຕົວຕົນແທ້ຈິງ ແຕ່ກໍເບິ່ງຄືວ່າ ເຮົາບໍ່ມີຕົວຕົນ". ໃນບັນດາທຸກຄົນທີ່ເຊື່ອໃນພຣະເຈົ້າໃນຕອນນີ້, ບໍ່ມີຜູ້ໃດມີຄວາມແນ່ນອນທີ່ສຸດແບບຮ້ອຍເປີເຊັນວ່າພຣະເຈົ້າມີຢູ່ແທ້ຈິງ; ພວກເຂົາມີຄວາມສົງໄສສາມສ່ວນ ແລະ ມີຄວາມເຊື່ອສອງສ່ວນ. ນີ້ແມ່ນມະນຸດໃນສະພາບປັດຈຸບັນຂອງພວກເຂົາ. ຜູ້ຄົນໃນທຸກມື້ນີ້ລ້ວນແລ້ວແຕ່ຢູ່ໃນສະພາບການດັ່ງຕໍ່ໄປນີ້: ພວກເຂົາເຊື່ອວ່າ ມີພຣະເຈົ້າ ແຕ່ພວກເຂົາບໍ່ໄດ້ເຫັນພຣະອົງ; ຫຼື ພວກເຂົາບໍ່ເຊື່ອວ່າ ມີພຣະເຈົ້າ ແຕ່ມີຄວາມຫຍຸ້ງຍາກຫຼາຍຢ່າງທີ່ມະນຸດບໍ່ສາມາດແກ້ໄຂໄດ້. ມັນເບິ່ງຄືວ່າ ມີບາງຢ່າງທີ່ຮັດກຸມພວກເຂົາຕະຫຼອດເຊິ່ງພວກເຂົາບໍ່ສາມາດໜີພົ້ນໄດ້. ເຖິງວ່າພວກເຂົາຈະເຊື່ອໃນພຣະເຈົ້າ ແຕ່ມັນກໍເບິ່ງຄືວ່າພວກເຂົາຮູ້ສຶກເລື່ອນລອຍເລັກນ້ອຍຢູ່ຕະຫຼອດ. ຢ່າງໃດກໍຕາມ, ຖ້າພວກເຂົາບໍ່ເຊື່ອ ພວກເຂົາກໍຢ້ານທີ່ຈະເສຍໂອກາດຖ້າພຣະອົງມີຢູ່ຈິງ. ນີ້ແມ່ນຄວາມບໍ່ແນ່ໃຈຂອງພວກເຂົາ.

"ເພື່ອຊື່ຂອງເຮົາ, ເພື່ອພຣະວິນຍານຂອງເຮົາ ແລະ ເພື່ອແຜນການຄຸ້ມຄອງທັງໝົດຂອງເຮົາ, ມີຜູ້ໃດສາມາດຖວາຍກຳລັງທັງໝົດຂອງພວກເຂົາບໍ?" ພຣະເຈົ້າຍັງໄດ້ກ່າວວ່າ: "ໃນປັດຈຸບັນ ເມື່ອອານາຈັກຢູ່ໃນໂລກມະນຸດ, ນັ້ນກໍເປັນເວລາທີ່ເຮົາໄດ້ມາຢູ່ໃນທ່າມກາງມະນຸດດ້ວຍຕົວເອງ. ມີຜູ້ໃດສາມາດເຂົ້າສູ່ສະໜາມຮົບແທນເຮົາໂດຍບໍ່ມີຄວາມຢ້ານກົວໃດໆບໍ?" ເປົ້າໝາຍຂອງພຣະທຳຂອງພຣະເຈົ້າແມ່ນສິ່ງນີ້: ຖ້າມັນບໍ່ແມ່ນຍ້ອນພຣະເຈົ້າໃນເນື້ອໜັງປະຕິບັດພາລະກິດອັນບໍລິສຸດຂອງພຣະອົງໂດຍກົງ ຫຼື ຖ້າພຣະອົງບໍ່ໄດ້ບັງເກີດເປັນມະນຸດ ແຕ່ກົງກັນຂ້າມແມ່ນໄດ້ປະຕິບັດພາລະກິດຜ່ານນັກເທດ, ພຣະອົງກໍຈະບໍ່ມີວັນສາມາດເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ໄດ້ ແລະ ພຣະອົງຈະບໍ່ສາມາດປົກຄອງມະນຸດໃນຖານະກະສັດໄດ້. ມະນຸດຈະບໍ່ສາມາດຮູ້ຈັກພຣະເຈົ້າໃນຄວາມເປັນຈິງ, ດ້ວຍເຫດນັ້ນ ສິ່ງນີ້ກໍຍັງຈະເປັນການປົກຄອງຂອງຊາຕານ. ສະນັ້ນ, ພຣະເຈົ້າຈຶ່ງຕ້ອງປະຕິບັດຂັ້ນຕອນນີ້ຂອງພາລະກິດດ້ວຍຕົວເອງຜ່ານເນື້ອໜັງທີ່ບັງເກີດເປັນມະນຸດ. ຖ້າມີການປ່ຽນແປງເນື້ອໜັງ ຂັ້ນຕອນນີ້ຂອງແຜນການກໍຈະບໍ່ມີວັນຖືກເຮັດໃຫ້ສຳເລັດໄດ້ ເພາະວ່າຄວາມສຳຄັນ ແລະ ທາດແທ້ຂອງເນື້ອໜັງຕ່າງໆຈະບໍ່ຄືກັນ. ຜູ້ຄົນສາມາດເຂົ້າໃຈຄວາມໝາຍຕາມໂຕຂອງພຣະທຳເຫຼົ່ານີ້ເທົ່ານັ້ນຍ້ອນພຣະເຈົ້າເຂົ້າໃຈຮາກຖານ. ພຣະເຈົ້າໄດ້ກ່າວວ່າ: "ຢ່າງໃດກໍຕາມ ເມື່ອທຸກຢ່າງຖືກກ່າວ ແລະ

ເຮັດໃຫ້ສຳເລັດແລ້ວ ກໍບໍ່ມີຜູ້ໃດທີ່ເຂົ້າໃຈວ່າ ສິ່ງນີ້ແມ່ນການປະຕິບັດພາລະກິດຂອງພຣະວິນຍານ ຫຼື ເປັນໜ້າທີ່ຂອງເນື້ອໜັງ. ຜູ້ຄົນຈະຕ້ອງໄດ້ໃຊ້ເວລາທັງຊີວິດພຽງເພື່ອປະສົບກັບສິ່ງນີ້ສິ່ງດຽວຢ່າງລະອຽດ". ຜູ້ຄົນຖືກຊາຕານເຮັດໃຫ້ເສື່ອມຊາມເປັນເວລາຫຼາຍປີ ແລະ ພວກເຂົາໄດ້ສູນເສຍສະຕິຂອງພວກເຂົາກ່ຽວກັບເລື່ອງທາງວິນຍານແຕ່ດົນນານແລ້ວ. ຍ້ອນເຫດຜົນນີ້, ພຣະທຳຂອງພຣະເຈົ້າພຽງປະໂຫຍກດຽວກໍເປັນດັ່ງອາຫານສຳລັບສາຍຕາຂອງຜູ້ຄົນ. ຍ້ອນໄລຍະຫ່າງລະຫວ່າງພຣະວິນຍານ ແລະ ວິນຍານ, ທຸກຄົນທີ່ເຊື່ອໃນພຣະເຈົ້າຈຶ່ງຮູ້ສຶກປາຖະໜາຫາພຣະອົງ ແລະ ພວກເຂົາທຸກຄົນກໍເຕັມໃຈທີ່ຈະຢູ່ໃກ້ຊິດກັບພຣະອົງ ແລະ ຖອກເທຫົວໃຈຂອງພວກເຂົາອອກມາ. ຢ່າງໃດກໍຕາມ, ພວກເຂົາບໍ່ກ້າທີ່ຈະເຂົ້າມາພົວພັນກັບພຣະອົງ ແລະ ກົງກັນຂ້າມ ແມ່ນຍັງຄົງຢ້ານກົວຢູ່. ນີ້ແມ່ນພະລັງແຫ່ງການດຶງດູດທີ່ພຣະວິນຍານມີ. ຍ້ອນພຣະເຈົ້າແມ່ນພຣະເຈົ້າເພື່ອໃຫ້ຜູ້ຄົນຮັກ ແລະ ໃນຕົວພຣະອົງແມ່ນມີອົງປະກອບທີ່ບໍ່ມີຈຳກັດເພື່ອໃຫ້ພວກເຂົາຮັກ, ທຸກຄົນຈຶ່ງຮັກພຣະອົງ ແລະ ທຸກຄົນປາຖະໜາທີ່ຈະໄວ້ວາງໃຈພຣະອົງ. ໃນຄວາມຈິງແລ້ວ, ທຸກຄົນມີຄວາມຮັກຕໍ່ພຣະເຈົ້າໃນຫົວໃຈຂອງພວກເຂົາ. ມັນເປັນພຽງແຕ່ວ່າ ການຂັດຂວາງຂອງຊາຕານໄດ້ຫ້າມຄົນທີ່ຕາຍດ້ານ, ໂງ່ຈ້າ ແລະ ເປັນຕາສົມເພດບໍ່ໃຫ້ຮູ້ຈັກພຣະເຈົ້າ. ນີ້ຄືເຫດຜົນທີ່ພຣະເຈົ້າໄດ້ກ່າວເຖິງຄວາມຮູ້ສຶກທີ່ແທ້ຈິງຂອງມະນຸດທີ່ມີຕໍ່ພຣະອົງ: "ມະນຸດບໍ່ເຄີຍກຽດຊັງເຮົາໃນສ່ວນເລິກທີ່ສຸດຂອງຫົວໃຈຂອງພວກເຂົາ; ກົງກັນຂ້າມ ພວກເຂົາຍຶດຕິດກັບເຮົາໃນສ່ວນເລິກຂອງຈິດວິນຍານຂອງພວກເຂົາ... ຄວາມເປັນຈິງຂອງເຮົາເຮັດໃຫ້ມະນຸດເວົ້າບໍ່ອອກ, ຕົກສະເງີ້ ແລະ ມຶນງົງ ແຕ່ເຖິງຢ່າງໃດ ພວກເຂົາກໍເຕັມໃຈທີ່ຈະຍອມຮັບສິ່ງນີ້". ນີ້ແມ່ນສະພາບຕົວຈິງທີ່ຢູ່ສ່ວນເລິກໃນຫົວໃຈຂອງຜູ້ທີ່ເຊື່ອໃນພຣະເຈົ້າ. ເມື່ອຜູ້ຄົນຮູ້ຈັກພຣະເຈົ້າຢ່າງແທ້ຈິງ, ທ່າທີຂອງພວກເຂົາທີ່ມີຕໍ່ພຣະອົງກໍປ່ຽນແປງໂດຍທຳມະຊາດ ແລະ ຍ້ອນໜ້າທີ່ງມີຢູ່ໃນຈິດໃຈຂອງພວກເຂົາ, ພວກເຂົາຈຶ່ງສາມາດກ່າວສັນລະເສີນຈາກສ່ວນເລິກຂອງຫົວໃຈຂອງພວກ. ພຣະເຈົ້າແມ່ນຢູ່ໃນສ່ວນເລິກຂອງຈິດໃຈຂອງທຸກຄົນ ແຕ່ຍ້ອນຄວາມເສື່ອມຊາມຂອງຊາຕານ ຜູ້ຄົນຈຶ່ງມີຄວາມສັບສົນລະຫວ່າງພຣະເຈົ້າກັບຊາຕານ. ພາລະກິດຂອງພຣະເຈົ້າໃນປັດຈຸບັນເລີ່ມດ້ວຍບັນຫານີ້ ແລະ ໃນໂລກແຫ່ງວິນຍານ ມັນໄດ້ເປັນຈຸດສຸມຂອງການຕໍ່ສູ້ແຕ່ຕົ້ນຈົນຈົບ.

# ບົດທີ 16

ຈາກມຸມມອງຂອງມະນຸດ, ພຣະເຈົ້າແມ່ນຍິ່ງໃຫຍ່ຫຼາຍ, ອຸດົມສົມບູນຫຼາຍ, ມະຫັດສະຈັນຫຼາຍ, ຍາກຫຼາຍທີ່ຈະຢັ່ງເຖິງ; ໃນສາຍຕາຂອງຜູ້ຄົນ, ພຣະທຳຂອງພຣະເຈົ້າແມ່ນລອຍຂຶ້ນສູງ ແລະ ປາກົດເປັນຜົນງານທີ່ດີເດັ່ນຂອງໂລກ. ແຕ່ຍ້ອນວ່າ ຜູ້ຄົນມີຄວາມລົ້ມເຫຼວຫຼາຍເກີນໄປ ແລະ ຈິດໃຈຂອງພວກເຂົາທຳມະດາເກີນໄປ ແລະ ຍິ່ງໄປກວ່ານັ້ນ ຍ້ອນຄວາມສາມາດຂອງພວກເຂົາໃນການຍອມຮັບແມ່ນບໍ່ພຽງພໍ, ເຖິງວ່າ ພຣະເຈົ້າຈະກ່າວພຣະທຳຂອງພຣະອົງຢ່າງຊັດເຈນສໍ່າໃດກໍຕາມ ພວກເຂົາກໍຍັງຄົງນັ່ງ ແລະ ບໍ່ມີການເຄື່ອນໄຫວ ຄືກັບວ່າ ກຳລັງທົນທຸກກັບຄວາມປ່ວຍທາງຈິດ. ໃນເວລາທີ່ພວກເຂົາຫິວ ພວກເຂົາກໍບໍ່ເຂົ້າໃຈວ່າ ພວກເຂົາຕ້ອງກິນ, ໃນເວລາທີ່ພວກເຂົາກະຫາຍ ພວກເຂົາກໍບໍ່ເຂົ້າໃຈວ່າ ພວກເຂົາຕ້ອງດື່ມ; ພວກເຂົາພຽງແຕ່ສືບຕໍ່ຮ້ອງ ແລະ ຮ້ອງສຽງດັງ ຄືກັບວ່າ ພວກເຂົາກຳລັງປະສົບກັບຄວາມລຳບາກໃຈໃນສ່ວນເລິກຂອງຈິດວິນຍານຂອງພວກເຂົາທີ່ບໍ່ສາມາດອະທິບາຍໄດ້ ແຕ່ພວກເຂົາກໍບໍ່ສາມາດເວົ້າກ່ຽວກັບມັນໄດ້. ເມື່ອພຣະເຈົ້າສ້າງມະນຸດຊາດ ເຈດຕະນາຂອງພຣະອົງແມ່ນເພື່ອໃຫ້ມະນຸດດຳລົງຊີວິດໃນຄວາມເປັນມະນຸດທຳມະດາ ແລະ ຍອມຮັບເອົາພຣະທຳຂອງພຣະເຈົ້າຕາມສັນຊາດຕະຍານຂອງເຂົາ. ແຕ່ຍ້ອນວ່າ ໃນເບື້ອງຕົ້ນນັ້ນ ມະນຸດໄດ້ຍອມຈຳນົນຕໍ່ການລໍ້ລວງຂອງຊາຕານ, ໃນປັດຈຸບັນ ເຂົາຈຶ່ງຍັງບໍ່ສາມາດປົດປ່ອຍຕົວເອງ ແລະ ຍັງບໍ່ສາມາດຮູ້ຈັກເຖິງແຜນຫຼອກລວງທີ່ດຳເນີນໂດຍຊາຕານເປັນເວລາຫຼາຍພັນກວ່າປີ. ນອກຈາກນັ້ນ, ມະນຸດແມ່ນຂາດຄວາມສາມາດທີ່ຈະຮູ້ຈັກພຣະທຳຂອງພຣະເຈົ້າຢ່າງຄົບຖ້ວນ, ທັງໝົດນີ້ໄດ້ນຳໄປສູ່ສະຖານະການໃນປັດຈຸບັນ. ໃນສະຖານະການປັດຈຸບັນ, ຜູ້ຄົນຍັງດຳລົງຊີວິດຢູ່ໃນຄວາມອັນຕະລາຍຈາກການລໍ້ລວງຂອງຊາຕານ ແລະ ດ້ວຍເຫດນັ້ນ ຈຶ່ງຍັງບໍ່ສາມາດຮູ້ຄຸນຄ່າພຣະທຳຂອງພຣະເຈົ້າໃນທາງທີ່ຖືກຕ້ອງ. ໃນອຸປະນິໄສຂອງຄົນປົກກະຕິແມ່ນບໍ່ມີຄວາມຄົດງໍ ຫຼື ຄວາມຫຼອກລວງ, ຜູ້ຄົນແມ່ນມີຄວາມສຳພັນທີ່ປົກກະຕິຕໍ່ກັນ ແລະ ກັນ, ພວກເຂົາບໍ່ໄດ້ຢືນຢູ່ຜູ້ດຽວ ແລະ ຊີວິດຂອງພວກເຂົາບໍ່ໄດ້ທຳມະດາ ແລະ ເສື່ອມໂຊມ. ເຊັ່ນດຽວກັນ ພຣະເຈົ້າກໍສັນລະເສີນໃນທ່າມກາງທຸກຄົນ; ພຣະທຳຂອງພຣະອົງແມ່ນແຜ່ຂະຫຍາຍທົ່ວມະນຸດ, ຜູ້ຄົນດຳລົງຊີວິດໃນຄວາມສະຫງົບນຳກັນ ແລະ ພາຍໃຕ້ການເບິ່ງແຍງ ແລະ ການປົກປ້ອງຂອງພຣະເຈົ້າ, ແຜ່ນດິນໂລກແມ່ນເຕັມໄປດ້ວຍຄວາມສາມັກຄີ, ບໍ່ມີການລົບກວນຂອງຊາຕານ ແລະ ສະຫງ່າລາສີຂອງພຣະເຈົ້າແມ່ນຖືເປັນສິ່ງທີ່ສຳຄັນທີ່ສຸດໃນທ່າມກາງມະນຸດ. ຜູ້ຄົນດັ່ງກ່າວແມ່ນຄືກັນກັບທູດສະຫວັນ: ບໍລິສຸດ, ມີຊີວິດຊີວາ, ບໍ່ເຄີຍຈົ່ມກ່ຽວກັບພຣະເຈົ້າ ແລະ ອຸທິດຄວາມພະຍາຍາມທັງໝົດຂອງພວກເຂົາ ເພື່ອລັດສະໝີຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກເທົ່ານັ້ນ. ຕອນນີ້ແມ່ນເວລາຂອງຄໍ່າຄືນທີ່ມືດມົວ ເຊິ່ງທຸກຄົນກຳລັງງົມຫາ ແລະ ຊອກຫາ, ຄໍ່າຄືນທີ່ມືດສະໜິດເຮັດໃຫ້ຂົນຫົວຂອງພວກເຂົາລຸກ ແລະ ພວກເຂົາບໍ່ສາມາດຊ່ວຍໄດ້ ນອກຈາກສັ່ນເຊັນດ້ວຍຄວາມຢ້ານກົວ; ຟັງດີໆ, ສຽງລົມຕາເວັນຕົກສ່ຽງເໜືອກຳລັງພັດໄປມາຢ່າງບໍ່ຢຸດຢັ້ງ ເບິ່ງຄືກັບວ່າ ມີສຽງຮ້ອງໄຫ້ເສຍໃຈຂອງມະນຸດລອຍມາກັບສາຍລົມນັ້ນ. ຜູ້ຄົນໂສກເສົ້າເສຍໃຈ ແລະ ຮ້ອງໄຫ້ຍ້ອນ

ໂຊກຊາຕາຂອງພວກເຂົາ. ເປັນຫຍັງພວກເຂົາອ່ານພຣະທຳຂອງພຣະເຈົ້າ ແຕ່ບໍ່ສາມາດເຂົ້າໃຈພຣະທຳເຫຼົ່ານັ້ນ? ມັນເປັນຄືກັບວ່າ ຊີວິດຂອງພວກເຂົາໃກ້ຈະໝົດຫວັງ, ຄືກັບວ່າ ຄວາມຕາຍໃກ້ຈະເກີດຂຶ້ນກັບພວກເຂົາ ແລະ ຄືກັບວ່າ ມື້ສຸດທ້າຍຂອງພວກເຂົາແມ່ນຢູ່ຕໍ່ໜ້າຂອງພວກເຂົາແລ້ວ. ສະຖານະການທີ່ໂສກເສົ້າດັ່ງກ່າວຄືຊ່ວງເວລາທີ່ທູດສະຫວັນທີ່ອ່ອນແອເອີ້ນຫາພຣະເຈົ້າ ແລະ ບອກເຖິງຄວາມລຳບາກຂອງພວກເຂົາດ້ວຍການຮ້ອງໄຫ້ອອກມາຢ່າງໂສກເສົ້າເສຍໃຈຊໍ້າແລ້ວຊໍ້າອີກ. ມັນເປັນຍ້ອນເຫດຜົນນີ້ ທູດສະຫວັນທີ່ເຮັດພາລະກິດໃນທ່າມກາງພຣະບຸດ ແລະ ປະຊາຊົນຂອງພຣະເຈົ້າ ຈະບໍ່ມີວັນລົງມາຫາມະນຸດອີກ; ນີ້ກໍເພື່ອປ້ອງກັນບໍ່ໃຫ້ພວກເຂົາຕິດຢູ່ໃນການຄວບຄຸມຂອງຊາຕານໃນຂະນະທີ່ຢູ່ໃນເນື້ອໜັງ ໂດຍທີ່ບໍ່ສາມາດປົດປ່ອຍຕົວເອງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງເຮັດພາລະກິດໃນໂລກແຫ່ງວິນຍານທີ່ມະນຸດແນມບໍ່ເຫັນເທົ່ານັ້ນ. ສະນັ້ນ, ເມື່ອພຣະເຈົ້າເວົ້າວ່າ "ເມື່ອເຮົາສະເດັດຂຶ້ນບັນລັງຢູ່ໃນໃຈຂອງມະນຸດ ນັ້ນຈະເປັນເວລາທີ່ພຣະບຸດທັງຫຼາຍ ແລະ ປະຊາຊົນຂອງເຮົາປົກຄອງແຜ່ນດິນໂລກ", ພຣະອົງໝາຍເຖິງເວລາເມື່ອທູດສະຫວັນທີ່ຢູ່ເທິງແຜ່ນດິນໂລກຈະໄດ້ມີຄວາມສຸກກັບພອນຂອງການຮັບໃຊ້ພຣະເຈົ້າໃນສະຫວັນ. ຍ້ອນມະນຸດແມ່ນການສະແດງອອກຂອງພຣະວິນຍານຂອງທູດສະຫວັນ, ພຣະເຈົ້າຈຶ່ງເວົ້າສິ່ງນັ້ນເພື່ອມະນຸດ, ການຢູ່ເທິງແຜ່ນດິນໂລກກໍຄືກັນກັບຢູ່ໃນສະຫວັນ; ການທີ່ມະນຸດຮັບໃຊ້ພຣະເຈົ້າຢູ່ເທິງແຜ່ນດິນໂລກກໍຄືກັນກັບການທີ່ທູດສະຫວັນຮັບໃຊ້ພຣະເຈົ້າຢູ່ໃນສະຫວັນໂດຍກົງ ແລະ ດ້ວຍເຫດນັ້ນ ໃນຊ່ວງເວລາທີ່ເຂົາຢູ່ເທິງແຜ່ນດິນໂລກ ມະນຸດຈຶ່ງມີຄວາມສຸກກັບພອນແຫ່ງສະຫວັນຊັ້ນສາມ. ນີ້ແມ່ນສິ່ງທີ່ຖືກກ່າວໃນພຣະທຳເຫຼົ່ານີ້ຢ່າງແທ້ຈິງ.

ມີຄວາມໝາຍຫຼາຍປະການທີ່ເຊື່ອງຊ້ອນຢູ່ໃນພຣະທຳຂອງພຣະເຈົ້າ. ພຣະທຳທີ່ວ່າ "ເມື່ອມື້ນັ້ນມາເຖິງ ຜູ້ຄົນຈະຮູ້ຈັກເຮົາໃນສ່ວນເລິກຂອງຫົວໃຈຂອງພວກເຂົາ ແລະ ຈະຈື່ຈຳເຮົາໃນຄວາມຄິດຂອງພວກເຂົາ" ພຣະທຳເຫຼົ່ານີ້ແມ່ນແນໃສ່ຈິດໃຈຂອງມະນຸດ. ຍ້ອນຄວາມອ່ອນແອຂອງທູດສະຫວັນພວກເຂົາຈຶ່ງອາໄສພຣະເຈົ້າໃນທຸກສິ່ງຕະຫຼອດ ແລະ ຖືກຍຶດຕິດຢູ່ກັບພຣະເຈົ້າ ແລະ ຮັກພຣະເຈົ້າສະເໝີ. ແຕ່ຍ້ອນການລົບກວນຂອງຊາຕານ ພວກເຂົາຈຶ່ງບໍ່ສາມາດຊ່ວຍຕົວເອງ ແລະ ບໍ່ສາມາດຄວບຄຸມຕົວເອງໄດ້; ພວກເຂົາປາດຖະໜາທີ່ຈະຮັກພຣະເຈົ້າ ແຕ່ກໍບໍ່ສາມາດຮັກພຣະອົງດ້ວຍໃຈທັງໝົດຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງທົນທຸກກັບຄວາມເຈັບປວດ. ມີພຽງແຕ່ເມື່ອພາລະກິດຂອງພຣະເຈົ້າບັນລຸເຖິງບາງຈຸດເທົ່ານັ້ນ ຄວາມປາດຖະໜາຂອງທູດສະຫວັນທີ່ໜ້າສົງສານເຫຼົ່ານີ້ ທີ່ຈະຮັກພຣະເຈົ້າຈຶ່ງຈະກາຍເປັນຈິງ ເຊິ່ງເປັນເຫດຜົນທີ່ພຣະເຈົ້າກ່າວພຣະທຳເຫຼົ່ານັ້ນ. ທຳມະຊາດຂອງທູດສະຫວັນແມ່ນເພື່ອໄດ້ຮັກ, ຖະໜຸຖະໜອມ ແລະ ເຊື່ອຟັງພຣະເຈົ້າ ແຕ່ພວກເຂົາກໍບໍ່ສາມາດບັນລຸສິ່ງນີ້ຢູ່ເທິງແຜ່ນດິນໂລກໄດ້ ແລະ ບໍ່ມີທາງເລືອກ ນອກຈາກຕ້ອງຝຶກຄວາມອົດທົນຈົນຮອດປັດຈຸບັນ. ພວກເຈົ້າອາດເບິ່ງໂລກໃນປັດຈຸບັນ: ມີພຣະເຈົ້າໃນໃຈຂອງທຸກຄົນ ແຕ່ຜູ້ຄົນບໍ່ສາມາດແຍກແຍະວ່າພຣະເຈົ້າທີ່ຢູ່ໃນຫົວໃຈຂອງພວກເຂົາແມ່ນພຣະເຈົ້າທີ່ແທ້ຈິງ ແລະ ພຣະເຈົ້າທີ່ບໍ່ແທ້ຈິງ ແລະ ເຖິງວ່າ ພວກເຂົາຈະຮັກພຣະເຈົ້າດັ່ງກ່າວນີ້ຂອງພວກເຂົາ, ພວກເຂົາກໍບໍ່ສາມາດຮັກພຣະເຈົ້າໄດ້ຢ່າງແທ້ຈິງ ເຊິ່ງໝາຍຄວາມວ່າ ພວກເຂົາບໍ່ມີການຄວບຄຸມຕົວເອງ. ໃບໜ້າຂີ້ຮ້າຍຂອງ

ມະນຸດ ທີ່ຖືກເປີດເຜີຍໂດຍພຣະເຈົ້າ ແມ່ນໃບໜ້າທີ່ແທ້ຈິງຂອງຊາຕານໃນໂລກແຫ່ງວິນຍານ. ມະນຸດແມ່ນບໍລິສຸດແຕ່ເດີມມາ ແລະ ບໍ່ໄດ້ມີບາບ ແລະ ດ້ວຍເຫດນັ້ນ ຄຸນລັກສະນະທີ່ເສື່ອມຊາມ ແລະ ຂີ້ຮ້າຍທັງໝົດຂອງມະນຸດແມ່ນເປັນການກະທຳຂອງຊາຕານໃນໂລກແຫ່ງວິນຍານ ແລະ ເປັນບົດບັນທຶກທີ່ເຊື່ອຖືໄດ້ ກ່ຽວກັບການພັດທະນາຂອງໂລກແຫ່ງວິນຍານ. "ໃນປັດຈຸບັນນີ້ ຜູ້ຄົນໄດ້ມີຄຸນສົມບັດ ແລະ ເຊື່ອວ່າ ພວກເຂົາສາມາດຍ່າງວາງທ່າຢູ່ຕໍ່ໜ້າເຮົາ ແລະ ຫົວຂວັນ ແລະ ເວົ້າຕະຫຼົກກ່ຽວກັບເຮົາ ໂດຍບໍ່ມີການຫັກຫ້າມໃຈແມ່ນແຕ່ໜ້ອຍ ແລະ ກ່າວກັບເຮົາປານວ່າ ມີຄວາມເທົ່າທຽມກັນ. ເຖິງຢ່າງນັ້ນ ມະນຸດກໍຍັງບໍ່ຮູ້ຈັກເຮົາ, ເຖິງຢ່າງນັ້ນ ເຂົາກໍຍັງເຊື່ອວ່າ ພວກເຮົາມີທຳມະຊາດທີ່ຄ້າຍຄືກັນ, ພວກເຮົາມີເນື້ອໜັງ ແລະ ເລືອດ ແລະ ພວກເຮົາທັງສອງອາໄສຢູ່ໂລກມະນຸດ". ນີ້ແມ່ນສິ່ງທີ່ຊາຕານໄດ້ເຮັດໃຫ້ຫົວໃຈຂອງມະນຸດ. ຊາຕານໃຊ້ແນວຄິດ ແລະ ຕາເປົ່າຂອງມະນຸດເພື່ອຕໍ່ຕ້ານພຣະເຈົ້າ ແຕ່ເຖິງຢ່າງໃດກໍຕາມ ພຣະເຈົ້າບອກມະນຸດກ່ຽວກັບສິ່ງເຫຼົ່ານີ້ໂດຍເວົ້າແບບບໍ່ອ້ອມຄ້ອມກໍເພື່ອວ່າມະນຸດອາດຫຼີກເວັ້ນຄວາມພິນາດ. ຄວາມອ່ອນແອຂອງມະນຸດທຸກຄົນກໍຄື ພວກເຂົາພຽງເຫັນແຕ່ "ຮ່າງກາຍທີ່ມີເນື້ອໜັງ ແລະ ເລືອດ ແລະ ບໍ່ເຫັນພຣະວິນຍານຂອງພຣະເຈົ້າ". ນີ້ແມ່ນພື້ນຖານດ້ານໜຶ່ງຂອງການລໍ້ລວງມະນຸດຂອງຊາຕານ. ທຸກຄົນທີ່ເຊື່ອວ່າ ມີແຕ່ພຣະວິນຍານໃນເນື້ອໜັງນີ້ເທົ່ານັ້ນ ທີ່ສາມາດຖືກເອີ້ນວ່າ ພຣະເຈົ້າ. ບໍ່ມີໃຜເຊື່ອວ່າ ໃນປັດຈຸບັນ ພຣະວິນຍານໄດ້ກາຍເປັນເນື້ອໜັງ ແລະ ທີ່ຈິງແລ້ວ ແມ່ນໄດ້ປາກົດຕໍ່ສາຍຕາຂອງພວກເຂົາ; ຜູ້ຄົນເຫັນພຣະເຈົ້າເປັນສອງສ່ວນ ນັ້ນກໍຄື "ສິ່ງນຸ່ງຫົ່ມ ແລະ ເນື້ອໜັງ" ແລະ ບໍ່ມີໃຜເບິ່ງພຣະເຈົ້າເປັນພຣະວິນຍານທີ່ບັງເກີດເປັນມະນຸດ ແລະ ບໍ່ມີໃຜເຫັນວ່າ ແກ່ນແທ້ຂອງເນື້ອໜັງແມ່ນອຸປະນິໄສຂອງພຣະເຈົ້າ. ໃນຈິນຕະນາການຂອງຜູ້ຄົນ, ພຣະເຈົ້າແມ່ນທຳມະດາຫຼາຍ ແຕ່ພວກເຂົາບໍ່ຮູ້ບໍວ່າ ສິ່ງທີ່ຖືກເຊື່ອງໄວ້ໃນຄວາມທຳມະດານີ້ ແມ່ນດ້ານໜຶ່ງຂອງຄວາມໝາຍອັນເລິກເຊິ່ງຂອງພຣະເຈົ້າ?

ເມື່ອພຣະເຈົ້າເລີ່ມປົກຄຸມໂລກທັງໝົດ ມັນກໍຈະມືດສະໜິດ ແລະ ໃນຂະນະທີ່ຜູ້ຄົນນອນຫຼັບຢູ່ ພຣະເຈົ້າກໍໄດ້ໃຊ້ໂອກາດນີ້ ເພື່ອລົງມາຢູ່ທ່າມກາງມະນຸດ ແລະ ເລີ່ມສົ່ງພຣະວິນຍານໄປທຸກມຸມຂອງແຜ່ນດິນໂລກຢ່າງເປັນທາງການ ເພື່ອເລີ່ມລົງມືປະຕິບັດພາລະກິດຊ່ວຍມະນຸດຊາດໃຫ້ລອດພົ້ນ. ສາມາດເວົ້າໄດ້ວ່າ ເມື່ອພຣະເຈົ້າເລີ່ມຮັບເອົາພາບລັກຂອງເນື້ອໜັງ ພຣະເຈົ້າກໍໄດ້ກະທຳພາລະກິດຢູ່ເທິງແຜ່ນດິນໂລກຢ່າງເປັນທາງການ. ຫຼັງຈາກນັ້ນ ພາລະກິດຂອງພຣະວິນຍານແມ່ນໄດ້ເລີ່ມຂຶ້ນ ແລະ ເລີ່ມພາລະກິດທັງໝົດຢູ່ເທິງແຜ່ນດິນໂລກຢ່າງເປັນທາງການ. ເປັນເວລາສອງພັນປີ ພຣະວິນຍານຂອງພຣະເຈົ້າໄດ້ເຮັດພາລະກິດທົ່ວຈັກກະວານຢູ່ຕະຫຼອດ. ຜູ້ຄົນບໍ່ຮູ້ຈັກ ແລະ ບໍ່ຮູ້ສຶກເຖິງສິ່ງນີ້ ແຕ່ໃນໄລຍະຍຸກສຸດທ້າຍ ໃນເວລາທີ່ຍຸກນີ້ໃກ້ຈະສິ້ນສຸດລົງ ພຣະເຈົ້າໄດ້ລົງມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດດ້ວຍພຣະອົງເອງ. ນີ້ແມ່ນໂຊກດີຂອງຜູ້ທີ່ເກີດໃນໄລຍະຍຸກສຸດທ້າຍ ເຊິ່ງເປັນຜູ້ທີ່ສາມາດເຫັນພາບລັກຂອງພຣະເຈົ້າທີ່ດຳລົງຊີວິດໃນເນື້ອໜັງດ້ວຍຕົວເອງ. "ເມື່ອມະຫາສະໝຸດທັງໝົດມືດມົວ ເຮົາກໍເລີ່ມຊີມລົດຊາດແຫ່ງຄວາມຂົມຂື່ນຂອງໂລກໃນທ່າມກາງມະນຸດ. ພຣະວິນຍານຂອງເຮົາເດີນທາງທົ່ວໂລກ ແລະ ເບິ່ງຈິດໃຈຂອງຜູ້ຄົນ ແລະ ເຊັ່ນດຽວກັນ ເຮົາກໍເອົາຊະນະມວນມະນຸດ

ໂດຍການສະຖິດໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາ". ສິ່ງດັ່ງກ່າວແມ່ນການຮ່ວມມືຢ່າງສາມັກຄີລະຫວ່າງພຣະເຈົ້າໃນສະຫວັນ ແລະ ພຣະເຈົ້າເທິງແຜ່ນດິນໂລກ. ໃນທີ່ສຸດແລ້ວ ໃນຄວາມຄິດຂອງພວກເຂົາ ຜູ້ຄົນຈະເຊື່ອວ່າ ພຣະເຈົ້າເທິງແຜ່ນດິນໂລກແມ່ນພຣະເຈົ້າໃນສະຫວັນ, ສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທີ່ຢູ່ໃນສິ່ງເຫຼົ່ານັ້ນແມ່ນຖືກສ້າງຂຶ້ນໂດຍພຣະເຈົ້າເທິງແຜ່ນດິນໂລກ, ມະນຸດແມ່ນຖືກຄວບຄຸມໂດຍພຣະເຈົ້າເທິງແຜ່ນດິນໂລກ, ພຣະເຈົ້າເທິງແຜ່ນດິນໂລກປະຕິບັດພາລະກິດຂອງສະຫວັນຢູ່ແຜ່ນດິນໂລກ ແລະ ພຣະເຈົ້າໃນສະຫວັນໄດ້ປາກົດໃນເນື້ອໜັງ. ນີ້ແມ່ນຈຸດປະສົງສຸດທ້າຍຂອງພາລະກິດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ແລະ ດ້ວຍເຫດນັ້ນ ຂັ້ນຕອນນີ້ຈຶ່ງແມ່ນມາດຕະຖານສູງສຸດຂອງພາລະກິດໃນຊ່ວງໄລຍະທີ່ຢູ່ໃນເນື້ອໜັງ; ມັນຖືກດຳເນີນດ້ວຍຄວາມເປັນພຣະເຈົ້າ ແລະ ເຮັດໃຫ້ທຸກຄົນເຊື່ອຢ່າງຈິງໃຈ. ຍິ່ງຜູ້ຄົນຊອກຫາພຣະເຈົ້າໃນແນວຄິດຂອງພວກເຂົາ, ພວກເຂົາຍິ່ງຮູ້ສຶກວ່າ ພຣະເຈົ້າເທິງແຜ່ນດິນໂລກບໍ່ແມ່ນພຣະເຈົ້າທີ່ແທ້ຈິງ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ ຜູ້ຄົນຊອກຫາພຣະເຈົ້າໃນທ່າມກາງຄຳເວົ້າ ແລະ ທິດສະດີທີ່ປາກເປົ່າ. ຍິ່ງຜູ້ຄົນຮູ້ຈັກພຣະເຈົ້າໃນແນວຄິດຂອງພວກເຂົາ, ພວກເຂົາຍິ່ງຊຳນານໃນການເວົ້າພຣະທຳ ແລະ ທິດສະດີເຫຼົ່ານີ້, ແລ້ວພວກເຂົາຍິ່ງເຫຼື້ອມໃສ; ຍິ່ງຜູ້ຄົນເວົ້າພຣະທຳ ແລະ ທິດສະດີ, ພວກເຂົາຍິ່ງຫຼົງທາງອອກຫ່າງຈາກພຣະເຈົ້າ, ພວກເຂົາຍິ່ງບໍ່ມີຄວາມສາມາດຮູ້ຈັກທາດແທ້ຂອງມະນຸດ, ພວກເຂົາຍິ່ງບໍ່ເຊື່ອຟັງພຣະເຈົ້າ ແລະ ຍິ່ງອອກຫ່າງຈາກຄວາມຕ້ອງການຂອງພຣະເຈົ້າ. ຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ມະນຸດແມ່ນບໍ່ໄດ້ເໜືອທຳມະຊາດຄືດັ່ງທີ່ຜູ້ຄົນຈິນຕະນາການກັນ ແຕ່ເຖິງຢ່າງນັ້ນ ກໍບໍ່ເຄີຍມີໃຜເຂົ້າໃຈຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າວ່າ "ຜູ້ຄົນສະແຫວງຫາທ້ອງຟ້າອັນກວ້າງໃຫຍ່ໄພສານເທົ່ານັ້ນ ຫຼື ໃນຄື້ນທະເລ ຫຼື ທະເລສາບທີ່ງຽບສະຫງົບ ຫຼື ໃນໜັງສື ແລະ ທິດສະດີທີ່ວ່າງເປົ່າ". ຍິ່ງພຣະເຈົ້າກຳນົດເງື່ອນໄຂໃຫ້ແກ່ມະນຸດ ຜູ້ຄົນກໍຍິ່ງຮູ້ສຶກວ່າ ເອື້ອມບໍ່ເຖິງພຣະເຈົ້າ ແລະ ພວກເຂົາຍິ່ງເຊື່ອວ່າ ພຣະເຈົ້ານັ້ນຍິ່ງໃຫຍ່. ສະນັ້ນ, ໃນຄວາມຮູ້ສຶກຂອງພວກເຂົາພຣະທຳທຸກຂໍ້ທີ່ກ່າວອອກຈາກປາກຂອງພຣະເຈົ້າແມ່ນບັນລຸບໍ່ໄດ້ໂດຍມະນຸດ ເຊິ່ງເຮັດໃຫ້ພຣະເຈົ້າບໍ່ມີທາງເລືອກ ນອກຈາກຕ້ອງກະທຳການດ້ວຍຕົວເອງ; ໃນຂະນະດຽວກັນ ມະນຸດບໍ່ມີຄວາມປາຖະໜາແມ່ນແຕ່ໜ້ອຍດຽວທີ່ຈະຮ່ວມມືກັບພຣະເຈົ້າ ແລະ ພຽງແຕ່ດື້ດ້ານທີ່ຈະກົ້ມຫົວຂອງເຂົາ ແລະ ສາລະພາບບາບຂອງເຂົາ ໂດຍພະຍາຍາມທີ່ຈະອ່ອນນ້ອມ ແລະ ເຊື່ອຟັງ. ສະນັ້ນ, ຜູ້ຄົນຈຶ່ງເຂົ້າສູ່ສາສະໜາໃໝ່, ເຂົ້າສູ່ພິທີກຳທາງສາສະໜາ ທີ່ຍິ່ງເຂັ້ມງວດຫຼາຍກວ່າສາສະໜາຂອງຄຣິສຕະຈັກ ໂດຍທີ່ບໍ່ຮູ້ຕົວ. ສິ່ງນີ້ຈຶ່ງຈຳເປັນໃຫ້ຜູ້ຄົນກັບຄືນໄປສູ່ສະພາບປົກກະຕິຜ່ານການປ່ຽນແປງສະພາບທີ່ເປັນລົບຂອງພວກເຂົາໃຫ້ເປັນບວກ; ຖ້າບໍ່ເຊັ່ນນັ້ນ ມະນຸດກໍຈະຕິດກັບດັກໜັກຂຶ້ນ.

ເປັນຫຍັງພຣະເຈົ້າຈຶ່ງສຸມໃສ່ການພັນລະນາພູເຂົາ ແລະ ແມ່ນ້ຳດ້ວຍພຣະຄຳຫຼາຍໆຄຳຂອງພຣະອົງ? ມີຄວາມໝາຍທີ່ເປັນສັນຍາລັກໃນພຣະທຳເຫຼົ່ານີ້ບໍ? ພຣະເຈົ້າບໍ່ພຽງແຕ່ປ່ອຍໃຫ້ມະນຸດເຫັນການກະທຳຂອງພຣະອົງໃນເນື້ອໜັງຂອງພຣະອົງ ແຕ່ຍັງເຮັດໃຫ້ມະນຸດເຂົ້າໃຈພະລັງຂອງພຣະອົງໃນທ້ອງຟ້າ. ໃນວິທີນີ້, ໃນເວລາດຽວກັນ ໃນຂະນະທີ່ເຊື່ອຢ່າງບໍ່ມີຄວາມສົງໄສວ່າ ນີ້ແມ່ນພຣະເຈົ້າ

ໃນເນື້ອໜັງ, ຜູ້ຄົນຍັງຮູ້ຈັກການກະທຳຂອງພຣະເຈົ້າທີ່ແທ້ຈິງ ແລະ ດ້ວຍເຫດນັ້ນ ພຣະເຈົ້າເທິງແຜ່ນດິນໂລກຈຶ່ງຖືກສົ່ງໄປສະຫວັນ ແລະ ພຣະເຈົ້າໃນສະຫວັນກໍຖືກສົ່ງລົງມາແຜ່ນດິນໂລກ, ພຽງແຕ່ຫຼັງຈາກນັ້ນ ຜູ້ຄົນຈຶ່ງຈະກາຍເປັນຄົນທີ່ສາມາດເຫັນທຸກສິ່ງທີ່ພຣະເຈົ້າເປັນຢ່າງຄົບຖ້ວນຫຼາຍຂຶ້ນ ແລະ ໄດ້ຮັບຄວາມຮູ້ຫຼາຍຂຶ້ນກ່ຽວກັບລິດອຳນາດທັງໝົດຂອງພຣະເຈົ້າ. ຍິ່ງພຣະເຈົ້າສາມາດເອົາຊະນະມວນມະນຸດໃນເນື້ອໜັງ ແລະ ຢູ່ເໜືອເນື້ອໜັງທີ່ເດີນທາງໄປທັງຢູ່ເໜືອ ແລະ ທົ່ວຈັກກະວານທັງປວງ, ຜູ້ຄົນກໍຍິ່ງສາມາດເຫັນການກະທຳຂອງພຣະເຈົ້າບົນພື້ນຖານຂອງການເຫັນພຣະເຈົ້າທີ່ແທ້ຈິງ ແລະ ດ້ວຍເຫດນັ້ນ ຈຶ່ງຮູ້ຈັກຄວາມເປັນຈິງຂອງພາລະກິດຂອງພຣະເຈົ້າໃນທົ່ວຈັກກະວານທັງໝົດໂດຍຮູ້ວ່າ ນີ້ບໍ່ແມ່ນຂອງປອມ ແຕ່ແມ່ນຂອງຈິງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຮູ້ຈັກວ່າ ພຣະເຈົ້າທີ່ແທ້ຈິງຈິງໃນປັດຈຸບັນແມ່ນຕົວຕົນຂອງພຣະວິນຍານ ແລະ ບໍ່ແມ່ນປະເພດດຽວກັນກັບຮ່າງກາຍທີ່ເປັນເນື້ອໜັງຄືກັບມະນຸດ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ "ແຕ່ເມື່ອເຮົາປ່ອຍຄວາມໂກດຮ້າຍຂອງເຮົາອອກໄປ ພູເຂົາກໍຈະແຕກອອກເປັນຊິ້ນໆທັນທີ, ພື້ນດິນຈະເລີ່ມສັ່ນສະເທືອນທັນທີ, ນໍ້າຈະແຫ້ງທັນທີ ແລະ ມະນຸດຈະຖືກອ້ອມລ້ອມໄປດ້ວຍໄພພິບັດທັນທີ". ເມື່ອຜູ້ຄົນໄດ້ອ່ານພຣະທຳຂອງພຣະເຈົ້າ, ພວກເຂົາກໍເອົາສິ່ງເຫຼົ່ານັ້ນມາພົວພັນກັບເນື້ອໜັງຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ພາລະກິດ ແລະ ພຣະທຳໃນໂລກແຫ່ງວິນຍານຈຶ່ງຊີ້ໄປໃສ່ພຣະເຈົ້າໃນເນື້ອໜັງໂດຍກົງ ເຊິ່ງເຮັດໃຫ້ມີຜົນຮັບທີ່ມີປະສິດທິພາບຫຼາຍຂຶ້ນ. ເມື່ອພຣະເຈົ້າກ່າວ ມັນກໍມັກຈະມາຈາກສະຫວັນຫາແຜ່ນດິນໂລກ ແລະ ຕໍ່ມາກໍ່ແມ່ນຈາກແຜ່ນດິນໂລກຫາສະຫວັນອີກຄັ້ງໜຶ່ງ ເຊິ່ງເຮັດໃຫ້ທຸກຄົນບໍ່ສາມາດເຂົ້າໃຈແຮງຈູງໃຈ ແລະ ຕົ້ນກຳເນີດຂອງພຣະທຳຂອງພຣະເຈົ້າ. "ເມື່ອເຮົາຢູ່ທ່າມກາງສະຫວັນ ດວງດາວແມ່ນບໍ່ເຄີຍຕົກໃຈກັບການປາກົດຕົວຂອງເຮົາ. ກົງກັນຂ້າມ ຝູງດວງດາວແມ່ນໄດ້ເອົາໃຈໃສ່ປະຕິບັດພາລະກິດເພື່ອເຮົາ". ນັ້ນແມ່ນສະພາບຂອງສະຫວັນ. ພຣະເຈົ້າຈັດກຽມທຸກສິ່ງຢ່າງເປັນຂັ້ນຕອນໃນສະຫວັນຊັ້ນສາມ ໂດຍທີ່ມີຜູ້ຮັບໃຊ້ທຸກຄົນ ທີ່ຮັບໃຊ້ພຣະເຈົ້າ ພາກັນເຮັດພາລະກິດຂອງຕົວເອງເພື່ອພຣະເຈົ້າ. ພວກເຂົາບໍ່ເຄີຍເຮັດສິ່ງໃດທີ່ເປັນການບໍ່ເຊື່ອຟັງພຣະເຈົ້າ, ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ໄດ້ຖືກໂຍນເຂົ້າສູ່ຄວາມຕື່ນຕົກໃຈທີ່ພຣະເຈົ້າໄດ້ກ່າວເຖິງ ແຕ່ກົງກັນຂ້າມ ແມ່ນໄດ້ສຸມຈິດໃຈຂອງພວກເຂົາເຂົ້າໃນການເຮັດພາລະກິດຂອງຕົວເອງ ໂດຍບໍ່ມີຄວາມສັບສົນ ແລະ ດ້ວຍເຫດນັ້ນ ທູດສະຫວັນທັງໝົດຈຶ່ງດຳລົງຢູ່ໃນແສງສະຫວ່າງຂອງພຣະເຈົ້າ. ໃນຂະນະດຽວກັນ, ຍ້ອນຄວາມບໍ່ເຊື່ອຟັງຂອງພວກເຂົາ ແລະ ຍ້ອນພວກເຂົາບໍ່ຮູ້ຈັກພຣະເຈົ້າ ທຸກຄົນຢູ່ເທິງແຜ່ນດິນໂລກຈຶ່ງອາໄສຢູ່ໃນຄວາມມືດ ແລະ ຍິ່ງພວກເຂົາຕໍ່ຕ້ານພຣະເຈົ້າ ພວກເຂົາກໍຍິ່ງອາໄສຢູ່ໃນຄວາມມືດ. ເມື່ອພຣະເຈົ້າເວົ້າວ່າ "ສະຫວັນຍິ່ງແຈ້ງສະຫວ່າງຂຶ້ນເທົ່າໃດ ໂລກໃນເບື້ອງລຸ່ມກໍຍິ່ງມືດມົວລົງເທົ່ານັ້ນ", ພຣະອົງແມ່ນໝາຍເຖິງວິທີທີ່ມື້ຂອງພຣະເຈົ້າໄດ້ເຂົ້າໃກ້ມະນຸດທຸກຄົນຫຼາຍຂຶ້ນ. ສະນັ້ນ, ພາວະທີ່ຫຍຸ້ງເປັນເວລາ 6.000ປີ ຂອງພຣະເຈົ້າຢູ່ໃນສະຫວັນຊັ້ນສາມກໍຈະສິ້ນສຸດລົງໃນໄວໆນີ້. ທຸກສິ່ງເທິງແຜ່ນດິນໂລກໄດ້ເຂົ້າສູ່ບົດສຸດທ້າຍ ແລະ ໃນບໍ່ຊ້າແຕ່ລະຢ່າງກໍຈະຖືກຕັດອອກຈາກມືຂອງພຣະເຈົ້າ. ຍິ່ງຜູ້ຄົນເຂົ້າສູ່ເວລາແຫ່ງຍຸກສຸດທ້າຍຫຼາຍສໍ່າໃດ, ພວກເຂົາຍິ່ງສາມາດຊີມລົດຊາດຄວາມເສື່ອມຊາມໃນໂລກມະນຸດສໍ່ານັ້ນ; ຍິ່ງພວກເຂົາ

ເຂົ້າສູ່ເວລາແຫ່ງຍຸກສຸດທ້າຍຫຼາຍສໍ່າໃດ, ພວກເຂົາກໍຍິ່ງໝົກມຸ້ນໃນເນື້ອໜັງຂອງຕົວເອງຫຼາຍສໍ່ານັ້ນ. ຍັງມີຫຼາຍຄົນທີ່ປາດຖະໜາທີ່ຈະພິກປິ້ນສະພາບທີ່ອະນາດຂອງໂລກ ແຕ່ຄວາມຫວັງຂອງພວກເຂົາກໍ່ສູນຫາຍໄປໃນທ່າມກາງສິ່ງທີ່ພວກເຂົາເຫັນ ຍ້ອນການກະທໍາຂອງພຣະເຈົ້າ. ສະນັ້ນ, ເມື່ອຜູ້ຄົນຮູ້ສຶກເຖິງຄວາມອົບອຸ່ນຂອງລະດູໃບໄມ້ປົ່ງ, ພຣະເຈົ້າກໍຈະປິດຕາຂອງພວກເຂົາ ແລະ ດ້ວຍເຫດນັ້ນພວກເຂົາກໍຈະຟູຢູ່ເທິງຄື້ນທີ່ກິ້ງໄປມາ ໂດຍບໍ່ມີຜູ້ໃດໃນບັນດາພວກເຂົາສາມາດໄປຫາເຮືອຊູຊີບທີ່ຢູ່ຫ່າງໄກໄດ້. ຍ້ອນຜູ້ຄົນອ່ອນແອແຕ່ກໍາເນີດ ພຣະເຈົ້າຈຶ່ງເວົ້າວ່າ ບໍ່ມີໃຜທີ່ສາມາດປ່ຽນສິ່ງຕ່າງໆໄດ້. ເມື່ອຜູ້ຄົນສູນເສຍຄວາມຫວັງ ພຣະເຈົ້າຈຶ່ງໄດ້ເລີ່ມເວົ້າກັບຈັກກະວານທັງໝົດ, ພຣະອົງໄດ້ເລີ່ມຊ່ວຍມະນຸດຊາດທັງໝົດ ແລະ ພຽງແຕ່ຫຼັງຈາກນີ້ເທົ່ານັ້ນ ຜູ້ຄົນຈຶ່ງສາມາດມີຄວາມສຸກກັບຊີວິດໃໝ່ ທີ່ມາເຖິງ ເມື່ອສິ່ງຕ່າງໆຖືກປ່ຽນແປງ. ຜູ້ຄົນໃນປັດຈຸບັນແມ່ນຢູ່ໃນຂັ້ນຕອນຂອງການຫຼອກລວງຕົວເອງ. ຍ້ອນເສັ້ນທາງທີ່ຢູ່ຕໍ່ໜ້າພວກເຂົາວ່າງເປົ່າ ແລະ ບໍ່ຊັດເຈນ ແລະ ຍ້ອນວ່າອະນາຄົດຂອງພວກເຂົາແມ່ນ “ບໍ່ຈໍາກັດ” ແລະ “ບໍ່ມີພົມແດນ” ຜູ້ຄົນຂອງຍຸກນີ້ຈຶ່ງບໍ່ມີຈິດໃຈທີ່ຈະຕໍ່ສູ້ ແລະ ພຽງແຕ່ສາມາດໃຊ້ເວລາຂອງພວກເຂົາຄືກັບນົກຮານເຮົາ[ກ] ເທົ່ານັ້ນ. ບໍ່ເຄີຍມີຜູ້ໃດທີ່ສະແຫວງຫາການມີຊີວິດ ແລະ ຄວາມຮູ້ຂອງການດໍາລົງຢູ່ມະນຸດຢ່າງຈິງຈັງ; ກົງກັນຂ້າມ, ພວກເຂົາລໍຖ້າມື້ທີ່ພຣະຜູ້ຊ່ວຍໃນສະຫວັນລົງມາຢ່າງກະທັນຫັນ ເພື່ອພິກປິ້ນສະພາບທີ່ອະນາດຂອງໂລກ ເຊິ່ງຫຼັງຈາກນັ້ນ ພວກເຂົາຈຶ່ງຈະພະຍາຍາມມີຊີວິດຢູ່ຢ່າງຈິງຈັງ. ສິ່ງດັ່ງກ່າວແມ່ນສະພາບທີ່ແທ້ຈິງຂອງມວນມະນຸດທັງໝົດ ແລະ ນັ້ນຄືທັດສະນະຄະຕິຂອງທຸກຄົນ.

ໃນປັດຈຸບັນ, ພຣະເຈົ້າໄດ້ທໍານາຍຊີວິດໃໝ່ໃນອະນາຄົດຂອງມະນຸດ ໃນແງ່ຄວາມຄິດປັດຈຸບັນຂອງມະນຸດ. ນີ້ເປັນແສງສະຫວ່າງເລັກນ້ອຍທີ່ປາກົດອອກມາ ເຊິ່ງພຣະເຈົ້າກ່າວເຖິງ. ສິ່ງທີ່ພຣະເຈົ້າທໍານາຍແມ່ນສິ່ງທີ່ຈະບັນລຸໂດຍພຣະເຈົ້າໃນທີ່ສຸດ ແລະ ແມ່ນໝາກຜົນຂອງການເອົາໄຊຊະນະຂອງພຣະເຈົ້າເໜືອຊາຕານ. “ເຮົາເຄື່ອນໄຫວໄປມາຢູ່ເໜືອມະນຸດທຸກຄົນ ແລະ ກໍາລັງເບິ່ງໄປທົ່ວທຸກບ່ອນ. ບໍ່ມີສິ່ງໃດທີ່ເບິ່ງຄືເກົ່າ ແລະ ບໍ່ມີໃຜທີ່ເປັນຄືເກົ່າດັ່ງທີ່ເຂົາເຄີຍເປັນ. ເຮົາພັກຢູ່ເທິງບັນລັງ, ເຮົາອີງຢູ່ເໜືອຈັກກະວານທັງປວງ...”. ນີ້ແມ່ນຜົນຈາກພາລະກິດໃນປັດຈຸບັນຂອງພຣະເຈົ້າ. ທຸກຄົນທີ່ພຣະເຈົ້າເລືອກຈະກັບຄືນສູ່ສະພາບດັ່ງເດີມຂອງພວກເຂົາ ຍ້ອນວ່າ ທູດສະຫວັນທີ່ໄດ້ທົນທຸກເປັນເວລາຫຼາຍປີໄດ້ຖືກປົດປ່ອຍ ຄືດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ “ໃບໜ້າຄືກັບຜູ້ບໍລິສຸດທີ່ຢູ່ໃນໃຈຂອງມະນຸດ”. ຍ້ອນວ່າທູດສະຫວັນເຮັດພາລະກິດຢູ່ເທິງແຜ່ນດິນໂລກ ແລະ ຮັບໃຊ້ພຣະເຈົ້າຢູ່ເທິງແຜ່ນດິນໂລກ ແລະຍ້ອນລັດສະໝີຂອງພຣະເຈົ້າໄດ້ແຜ່ກະຈາຍໄປທົ່ວໂລກ, ສະຫວັນຈຶ່ງຖືກນໍາມາສູ່ແຜ່ນດິນໂລກ ແລະ

ກ ເລື່ອງລາວຂອງນົກຮານເຮົານັ້ນແມ່ນຄ້າຍຄືກັນຫຼາຍກັບນິທານອີສົບ (Aesop) ທີ່ກ່ຽວກັບມົດ ແລະ ຕັກກະແຕນ. ນົກຮານເຮົາເລືອກທີ່ຈະນອນຫຼັບ ແທນທີ່ຈະສ້າງຮັງໃນຂະນະທີ່ອາກາດນັ້ນອົບອຸ່ນຢູ່, ເຖິງແມ່ນວ່າ ຈະມີຄໍາຕັກເຕືອນຊໍ້າແລ້ວຊໍ້າອີກຈາກນົກກາງເຂນທີ່ເປັນເພື່ອນບ້ານຂອງມັນ. ເມື່ອລະດູໜາວມາຮອດ ນົກໂຕນັ້ນກໍແຂງກະດ້າງຕາຍ.

ແຜ່ນດິນໂລກຖືກຍົກຂຶ້ນໄປສູ່ສະຫວັນ. ດັ່ງນັ້ນ, ມະນຸດຈຶ່ງເປັນຈຸດເຊື່ອມຕໍ່ທີ່ເຊື່ອມຕໍ່ສະຫວັນ ແລະ ແຜ່ນດິນໂລກ; ສະຫວັນ ແລະ ແຜ່ນດິນໂລກຈະບໍ່ແຍກຈາກກັນອີກຕໍ່ໄປ, ບໍ່ຖືກແບ່ງແຍກອອກຈາກກັນອີກ ແຕ່ຖືກເຊື່ອມຕໍ່ເຂົ້າເປັນໜຶ່ງດຽວ. ໃນທົ່ວໂລກແມ່ນມີແຕ່ພຣະເຈົ້າ ແລະ ມະນຸດເທົ່ານັ້ນ. ບໍ່ມີຝຸ່ນ ຫຼື ດິນຕົມ ແລະ ທຸກສິ່ງແມ່ນຖືກສ້າງຂຶ້ນໃໝ່ ຄ້າຍຄືກັບແກະນ້ອຍທີ່ນອນຢູ່ເທິງທົ່ງຫຍ້າສີຂຽວກ້ອງທ້ອງຟ້າ ໂດຍມີຄວາມສຸກກັບພຣະຄຸນຂອງພຣະເຈົ້າ. ຍ້ອນການມາຂອງສີຂຽວ ລົມຫາຍໃຈແຫ່ງຊີວິດຈຶ່ງສ່ອງແສງໄປທົ່ວ ເນື່ອງຈາກພຣະເຈົ້າໄດ້ສະເດັດລົງມາເທິງແຜ່ນໂລກ ເພື່ອມາດຳລົງຊີວິດຢູ່ຮ່ວມກັບມະນຸດຕະຫຼອດໄປເປັນນິດ, ດັ່ງທີ່ໄດ້ກ່າວຈາກປາກຂອງພຣະເຈົ້າວ່າ "ເຮົາສາມາດອາໄສຢູ່ພາຍໃນພູເຂົາຊີໂອນອີກຄັ້ງຢ່າງສະຫງົບສຸກ". ນີ້ແມ່ນສັນຍາລັກເຖິງຄວາມພ່າຍແພ້ຂອງຊາຕານ, ມັນແມ່ນມື້ແຫ່ງການພັກຜ່ອນຂອງພຣະເຈົ້າ ແລະ ມື້ນີ້ຈະຖືກສັນລະເສີນ ແລະ ຖືກປະກາດໂດຍທຸກຄົນ ແລະ ຖືກລະລຶກໂດຍທຸກຄົນ. ເວລາທີ່ພຣະເຈົ້າພັກຜ່ອນຢູ່ບັນລັງ ນັ້ນກໍ່ແມ່ນເວລາທີ່ພຣະເຈົ້າປະຕິບັດພາລະກິດຂອງພຣະອົງຢູ່ເທິງແຜ່ນດິນໂລກສຳເລັດເຊັ່ນກັນ ແລະ ມັນແມ່ນຊ່ວງເວລາທີ່ຄວາມລຶກລັບທັງໝົດຂອງພຣະເຈົ້າຖືກເປີດເຜີຍຕໍ່ມະນຸດ; ພຣະເຈົ້າ ແລະ ມະນຸດຈະຢູ່ຮ່ວມກັນຢ່າງສັນຕິສຸກຕະຫຼອດໄປ ໂດຍທີ່ບໍ່ມີວັນແຍກຈາກກັນອີກ. ສິ່ງດັ່ງກ່າວແມ່ນພາບທີ່ສວຍງາມຂອງອານາຈັກ!

ໃນຄວາມລຶກລັບເຊື່ອງຊ້ອນດ້ວຍຄວາມລຶກລັບ; ພຣະທຳຂອງພຣະເຈົ້າແມ່ນເລິກເຊິ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້ຢ່າງແທ້ຈິງ.

# ບົດທີ 17

ໃນຄວາມຈິງແລ້ວ, ມະນຸດແມ່ນບໍ່ຮູ້ຈັກພຣະວັດຈະນະທັງໝົດ ທີ່ອອກຈາກປາກຂອງພຣະເຈົ້າ; ພຣະວັດຈະນະເຫຼົ່ານັ້ນ ລ້ວນແລ້ວແຕ່ແມ່ນພາສາທີ່ຜູ້ຄົນບໍ່ເຄີຍໄດ້ຍິນ. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ພຣະທຳຂອງພຣະເຈົ້າແມ່ນສິ່ງທີ່ລຶກລັບ. ຄົນສ່ວນໃຫຍ່ເຊື່ອຢ່າງຜິດໆວ່າ ຄວາມລຶກລັບປະກອບມີແຕ່ສິ່ງທີ່ຜູ້ຄົນບໍ່ສາມາດສະຫຼຸບດ້ວຍຄວາມຄິດເທົ່ານັ້ນ, ເປັນເລື່ອງຂອງສະຫວັນທີ່ພຣະເຈົ້າອະນຸຍາດໃຫ້ຜູ້ຄົນຮູ້ຈັກໃນປັດຈຸບັນ ຫຼື ເປັນຄວາມຈິງກ່ຽວກັບສິ່ງທີ່ພຣະເຈົ້າເຮັດໃນໂລກແຫ່ງວິນຍານ. ຈາກສິ່ງນີ້, ມັນຈຶ່ງຊັດເຈນວ່າ ຜູ້ຄົນບໍ່ປະຕິບັດຕໍ່ພຣະທຳທັງໝົດຂອງພຣະເຈົ້າດ້ວຍຄວາມສະເໝີພາບ ແລະ ພວກເຂົາບໍ່ຖະໜອມພຣະທຳເຫຼົ່ານັ້ນ; ກົງກັນຂ້າມ, ພວກເຂົາສຸມໃສ່ສິ່ງທີ່ພວກເຂົາເຊື່ອວ່າເປັນ "ສິ່ງລຶກລັບ". ນີ້ພິສູດໃຫ້ເຫັນວ່າ ຜູ້ຄົນບໍ່ຮູ້ຈັກວ່າ ພຣະທຳຂອງພຣະເຈົ້າແມ່ນຫຍັງ ຫຼື ຄວາມລຶກລັບແມ່ນຫຍັງ; ພວກເຂົາພຽງແຕ່ອ່ານພຣະທຳຂອງພຣະອົງ ພາຍໃນຂອບເຂດຂອງຄວາມເຊື່ອຂອງພວກເຂົາເອງ. ຄວາມເປັນຈິງກໍຄື ບໍ່ມີແມ່ນແຕ່ຄົນດຽວ ທີ່ຮັກພຣະທຳຂອງພຣະເຈົ້າຢ່າງແທ້ຈິງ ແລະ ນີ້ກໍແມ່ນຕົ້ນຕໍແທ້ຈິງໃນການທີ່ພຣະອົງກ່າວວ່າ: "ມະນຸດແມ່ນຜູ້ຊ່ຽວຊານໃນການຫຼອກລວງເຮົາ". ມັນບໍ່ແມ່ນວ່າ ພຣະເຈົ້າໄດ້ເວົ້າວ່າ ຜູ້ຄົນຂາດຄຸນຄວາມດີໃດໆ ຫຼື ຢູ່ໃນຄວາມສັບສົນຢ່າງສິ້ນເຊີງ; ນີ້ອະທິບາຍເຖິງສະຖານະການຕົວຈິງຂອງມະນຸດ. ຜູ້ຄົນເອງແມ່ນບໍ່ມີຄວາມຊັດເຈນຫຼາຍ ວ່າພຣະເຈົ້າຄອບຄອງພື້ນທີ່ວ່າງໃນຫົວໃຈຂອງພວກເຂົາຫຼາຍສໍ່າໃດ; ມີແຕ່ພຣະເຈົ້າເອງເທົ່ານັ້ນທີ່ຮູ້ເລື່ອງນີ້ທັງໝົດ. ດັ່ງນັ້ນ, ໃນຂະນະນີ້ ຜູ້ຄົນແມ່ນຄືກັນກັບເດັກເກີດໃໝ່ທີ່ກຳລັງດູດນົມ. ພວກເຂົານັ້ນບໍ່ຮູ້ເລີຍວ່າ ເປັນຫຍັງພວກເຂົາຈຶ່ງດື່ມນົມ ແລະ ເປັນຫຍັງພວກເຂົາຈຶ່ງຄວນຢູ່ລອດ. ມີແຕ່ແມ່ເທົ່ານັ້ນ ທີ່ເຂົ້າໃຈຄວາມຕ້ອງການຂອງເດັກເກີດໃໝ່; ລາວຈະບໍ່ປ່ອຍໃຫ້ເດັກເກີດໃໝ່ອຶດຢາກຈົນຕາຍ ແລະ ລາວຈະບໍ່ຍອມໃຫ້ເດັກເກີດໃໝ່ກິນຕົວເອງຈົນຕາຍ. ພຣະເຈົ້າຮູ້ຈັກຄວາມຕ້ອງການຂອງຜູ້ຄົນດີທີ່ສຸດ, ສະນັ້ນ ບາງຄັ້ງຄວາມຮັກຂອງພຣະອົງແມ່ນສະຖິດຢູ່ໃນພຣະທຳຂອງພຣະອົງ, ບາງຄັ້ງການພິພາກສາຂອງພຣະອົງກໍຖືກເປີດເຜີຍໃນພຣະທຳເຫຼົ່ານັ້ນ, ບາງຄັ້ງພຣະທຳເຫຼົ່ານັ້ນກໍເຮັດໃຫ້ຜູ້ຄົນເຈັບປວດຈົນເຖິງສ່ວນເລິກຂອງຫົວໃຈຂອງພວກເຂົາ ແລະ ບາງຄັ້ງພຣະທຳເຫຼົ່ານັ້ນກໍຈິງໃຈ ແລະ ຈິງຈັງທີ່ສຸດ. ສິ່ງນີ້ເຮັດໃຫ້ຜູ້ຄົນຮູ້ສຶກເຖິງຄວາມເມດຕາ ແລະ ການເຂົ້າເຖິງພຣະເຈົ້າ ແລະ ພຣະອົງບໍ່ແມ່ນຮູບຊົງທີ່ສະຫງ່າງາມ ແລະ ຖືກຈິນຕະນາຂຶ້ນ ທີ່ບໍ່ສາມາດຈັບຕ້ອງໄດ້. ພຣະອົງບໍ່ແມ່ນພຣະບຸດແຫ່ງສະຫວັນໃນຈິດໃຈຂອງຜູ້ຄົນ ເຊິ່ງເປັນຜູ້ທີ່ຜູ້ຄົນບໍ່ສາມາດແນມເບິ່ງໜ້າໄດ້ໂດຍກົງ ແລ້ວແຮງໄກທີ່ພຣະອົງຈະແມ່ນຜູ້ປະຫານຊີວິດ ທີ່ຂ້າຜູ້ບໍລິສຸດຕາມທີ່ຜູ້ຄົນຈິນຕະນາ. ອຸປະນິໄສທັງໝົດຂອງພຣະເຈົ້າແມ່ນຖືກເປີດເຜີຍໃນພາລະກິດຂອງພຣະອົງ; ອຸປະນິໄສຂອງພຣະເຈົ້າໃນເນື້ອໜັງໃນປັດຈຸບັນແມ່ນຍັງໄດ້ສະແດງອອກຜ່ານພາລະກິດຂອງພຣະອົງ. ສະນັ້ນ, ພັນທະກິດຂອງພຣະອົງແມ່ນໜຶ່ງໃນບັນດາພຣະທຳຂອງພຣະອົງ ເຊິ່ງບໍ່ແມ່ນສິ່ງທີ່ພຣະອົງເຮັດ ຫຼື ວິທີທີ່ພຣະອົງປາກົດອອກທາງດ້ານພາຍນອກ. ໃນທີ່ສຸດແລ້ວ, ທຸກຄົນຈະໄດ້ຮັບການສັ່ງສອນຈາກພຣະທຳຂອງພຣະເຈົ້າ ແລະ ຖືກເຮັດໃຫ້

ສົມບູນຍ້ອນສິ່ງເຫຼົ່ານັ້ນ. ໃນປະສົບການຂອງພວກເຂົາ ເຊິ່ງຖືກຊີ້ນຳໂດຍພຣະທຳຂອງພຣະເຈົ້າ, ຜູ້ຄົນຈະໄດ້ຮັບເສັ້ນທາງເພື່ອປະຕິບັດ ແລະ ຜ່ານພຣະທຳຈາກປາກຂອງພຣະເຈົ້າ ພວກເຂົາຈະຮູ້ຈັກອຸປະນິໄສທັງໝົດຂອງພຣະອົງ. ຍ້ອນພຣະທຳຂອງພຣະອົງ, ພາລະກິດທັງໝົດຂອງພຣະອົງຈະຖືກເຮັດໃຫ້ສຳເລັດ, ຜູ້ຄົນຈະມີຊີວິດ ແລະ ສັດຕູທັງໝົດຈະຖືກເອົາຊະນະ. ນີ້ແມ່ນພາລະກິດຫຼັກ ທີ່ບໍ່ມີໃຜສາມາດເບິ່ງຂ້າມໄດ້. ໃຫ້ພວກເຮົາພາກັນມາເບິ່ງພຣະທຳຂອງພຣະອົງ: "ພຣະວັດຈະນະຂອງເຮົາໄດ້ດັງກ້ອງຄືສຽງຟ້າຮ້ອງ ໂດຍປ່ອຍແສງໄປທຸກທິດທາງ ແລະ ທົ່ວແຜ່ນດິນໂລກທັງໝົດ ແລະ ໃນທ່າມກາງສຽງຟ້າຮ້ອງ ແລະ ຟ້າແມບເຫຼື້ອມນັ້ນ, ມະນຸດຖືກໂຈມຕີ. ບໍ່ມີມະນຸດຜູ້ໃດທີ່ເຄີຍເຂັ້ມແຂງໃນທ່າມກາງສຽງຟ້າຮ້ອງ ແລະ ຟ້າແມບເຫຼື້ອມ; ມະນຸດສ່ວນໃຫຍ່ແມ່ນຢ້ານກົວຫຼາຍຕໍ່ການມາຂອງແສງສະຫວ່າງຂອງເຮົາ ແລະ ບໍ່ຮູ້ວ່າຈະຕ້ອງເຮັດແນວໃດ". ທັນທີທີ່ພຣະເຈົ້າເປີດປາກຂອງພຣະອົງ ພຣະທຳກໍຈະອອກມາ. ພຣະອົງບັນລຸທຸກສິ່ງຜ່ານພຣະທຳ, ທຸກສິ່ງແມ່ນຖືກປ່ຽນແປງດ້ວຍພຣະທຳເຫຼົ່ານັ້ນ ແລະ ທຸກຄົນເກີດໃໝ່ຜ່ານພຣະທຳເຫຼົ່ານັ້ນ. "ຟ້າຮ້ອງ ແລະ ຟ້າແມບເຫຼື້ອມ" ໝາຍເຖິງຫຍັງ? "ແສງສະຫວ່າງ" ໝາຍເຖິງຫຍັງ? ບໍ່ມີແມ່ນແຕ່ສິ່ງດຽວທີ່ສາມາດໜີຈາກພຣະທຳຂອງພຣະເຈົ້າໄດ້. ພຣະອົງໃຊ້ພຣະທຳເພື່ອເປີດເຜີຍຈິດໃຈຂອງຜູ້ຄົນ ແລະ ສະແດງເຖິງຄວາມຂີ້ຮ້າຍຂອງພວກເຂົາ; ພຣະອົງໃຊ້ພຣະທຳເພື່ອຈັດການກັບທຳມະຊາດເກົ່າຂອງພວກເຂົາ ແລະ ເຮັດໃຫ້ປະຊາຊົນທັງໝົດຂອງພຣະອົງສົມບູນ. ນີ້ບໍ່ແມ່ນຄວາມສຳຄັນຂອງພຣະທຳຂອງພຣະເຈົ້າຢ່າງແທ້ຈິງບໍ? ໃນຈັກກະວານທັງໝົດ, ຖ້າບໍ່ມີການສະໜັບສະໜູນ ແລະ ການເສີມກຳລັງຈາກພຣະທຳຂອງພຣະເຈົ້າ ມະນຸດທຸກຄົນກໍຈະຖືກທຳລາຍຈົນເຖິງຈຸດທີ່ບໍ່ມີໃຜເຫຼືອຢູ່ແຕ່ດົນນານແລ້ວ. ນີ້ແມ່ນຫຼັກການໃນສິ່ງທີ່ພຣະເຈົ້າເຮັດ ແລະ ວິທີການໃນການເຮັດພາລະກິດ ໃນໄລຍະແຜນການຄຸ້ມຄອງຫົກພັນປີຂອງພຣະອົງ. ນີ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງພຣະທຳຂອງພຣະເຈົ້າ. ພວກມັນສຽບແທງເຂົ້າໃນສ່ວນເລິກຂອງຈິດວິນຍານຂອງຜູ້ຄົນໂດຍກົງ ທັນທີທີ່ຜູ້ຄົນເຫັນພຣະທຳຂອງພຣະອົງ, ພວກເຂົາຈະຮູ້ສຶກສັບສົນ ແລະ ຢ້ານກົວ ແລະ ລົບໜີຢ່າງໄວ. ພວກເຂົາຕ້ອງການລົບໜີຈາກຄວາມເປັນຈິງຂອງພຣະທຳຂອງພຣະອົງ ເຊິ່ງນັ້ນຄືເຫດຜົນທີ່ສາມາດພົບເຫັນ "ຄົນອົບພະຍົບ" ເຫຼົ່ານີ້ຢູ່ທຸກບ່ອນ. ທັນທີທີ່ມີການວາງອອກພຣະທຳຂອງພຣະເຈົ້າ ຜູ້ຄົນກໍໜີຈາກໄປ. ນີ້ແມ່ນຮູບພາບດ້ານໜຶ່ງຂອງຄວາມຂີ້ຮ້າຍຂອງມະນຸດທີ່ພຣະເຈົ້າວາດພາບໃຫ້ເຫັນ. ຕອນນີ້, ທຸກຄົນແມ່ນກຳລັງຕື່ນຂຶ້ນເທື່ອລະຄົນຈາກອາການເມົາມົວຂອງພວກເຂົາ; ມັນເປັນຄືກັບວ່າ ກ່ອນໜ້ານັ້ນພວກເຂົາທຸກຄົນໄດ້ເປັນໂລກຈິດ ແລະ ຕອນນີ້ ເມື່ອພວກເຂົາໄດ້ເຫັນພຣະທຳຂອງພຣະເຈົ້າ ກໍເບິ່ງຄືວ່າ ພວກເຂົາກຳລັງທົນທຸກກັບຜົນທີ່ຕົກຄ້າງຢູ່ຂອງພະຍາດນັ້ນ ແລະ ບໍ່ສາມາດຟື້ນຄືນສູ່ສະພາບເກົ່າຂອງພວກເຂົາໄດ້. ທຸກຄົນແມ່ນເປັນແນວນີ້ແທ້ໆ ແລະ ມັນຍັງແມ່ນການສະແດງເຖິງພຣະທຳເຫຼົ່ານີ້ຢ່າງແທ້ຈິງ: "ຫຼາຍຄົນທີ່ຖືກດົນບັນດານດ້ວຍແສງຣິບຣີນີ້ ກໍຖືກປຸກໃຫ້ຕື່ນຈາກພາບລວງຕາຂອງພວກເຂົາທັນທີ. ແຕ່ບໍ່ມີໃຜເຄີຍຮູ້ວ່າ ມື້ນັ້ນໄດ້ມາເຖິງແລ້ວ ທີ່ແສງສະຫວ່າງຂອງເຮົາລົງມາສູ່ແຜ່ນດິນໂລກ". ນີ້ແມ່ນເຫດຜົນທີ່ພຣະເຈົ້າເວົ້າວ່າ: "ມະນຸດສ່ວນໃຫຍ່ແມ່ນຕົກຕະລຶງຈາກການມາເຖິງຂອງແສງສະຫວ່າງຢ່າງກະທັນຫັນ".

ການເວົ້າເຊັ່ນນີ້ແມ່ນເໝາະສົມທີ່ສຸດ. ການພັນລະນາຂອງພຣະເຈົ້າກ່ຽວກັບມະນຸດແມ່ນບໍ່ມີຊ່ອງຫວ່າງແມ່ນແຕ່ຈະໃຫ້ປາຍເຂັມແຍ່ເຂົ້າໄປໄດ້ ແລະ ພຣະອົງໄດ້ບັນຍາຍກ່ຽວກັບມັນຢ່າງຖືກຕ້ອງ ແລະ ບໍ່ມີຂໍ້ຜິດພາດ ເຊິ່ງເປັນເຫດຜົນທີ່ເຮັດໃຫ້ທຸກຄົນເຊື່ອຢ່າງທີ່ສຸດ. ຍິ່ງໄປກວ່ານັ້ນ, ຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າໄດ້ເລີ່ມເກີດຂຶ້ນຈາກສ່ວນເລິກພາຍໃນໃຈຂອງພວກເຂົາໂດຍບໍ່ຮູ້ຕົວ. ມີພຽງດ້ວຍເຫດນັ້ນ ຕຳແໜ່ງຂອງພຣະເຈົ້າຈຶ່ງຈະກາຍເປັນຕຳແໜ່ງແທ້ຍິ່ງຂຶ້ນ ແລະ ນີ້ຍັງແມ່ນອີກວິທີໜຶ່ງໃນການເຮັດພາລະກິດຂອງພຣະເຈົ້າ.

"ມະນຸດສ່ວນໃຫຍ່ໄດ້ແຕ່ສັບສົນ; ພວກເຂົາມີບາດແຜໃນຕາ ແລະ ຖືກໂຍນລົງໃສ່ຂີ້ຕົມໂດຍແສງສະຫວ່າງ", ຍ້ອນຜູ້ຄົນດັ່ງກ່າວຕໍ່ຕ້ານຄວາມປະສົງຂອງພຣະເຈົ້າ (ນັ້ນກໍຄື ພວກເຂົາຂັດຂືນພຣະເຈົ້າ), ເມື່ອພຣະທຳຂອງພຣະອົງມາ ພວກເຂົາກໍຈະທົນທຸກກັບການຂ້ຽນຕີ ຍ້ອນຄວາມກະບົດຂອງພວກເຂົາ; ນີ້ແມ່ນເຫດຜົນທີ່ເວົ້າວ່າ ພວກເຂົາມີບາດແຜຢູ່ໃນຕາດ້ວຍແສງວະຫວ່າງ. ຜູ້ຄົນດັ່ງກ່າວແມ່ນຖືກມອບໃຫ້ຊາຕານໄປແລ້ວ; ສະນັ້ນ, ເມື່ອເຂົ້າສູ່ພາລະກິດໃໝ່ ພວກເຂົາກໍບໍ່ມີແສງສະຫວ່າງ ແລະ ແສງເຍືອງທາງໃດໆ. ທຸກຄົນທີ່ບໍ່ມີພາລະກິດຂອງພຣະວິນຍານບໍລິສຸດ ແມ່ນຖືກຊາຕານຄອບງຳ ແລະ ບໍ່ມີບ່ອນສຳລັບພຣະເຈົ້າຢູ່ໃນສ່ວນເລິກຫົວໃຈຂອງພວກເຂົາ. ສະນັ້ນ, ຈຶ່ງມີການເວົ້າວ່າ ຜູ້ຄົນເຫຼົ່ານີ້ "ຖືກໂຍນລົງໃສ່ຂີ້ຕົມ". ທຸກຄົນທີ່ຢູ່ໃນສະພາບນີ້ແມ່ນຢູ່ໃນສະພາບທີ່ສັບສົນ. ພວກເຂົາບໍ່ສາມາດເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ ແລະ ພວກເຂົາບໍ່ສາມາດເຮັດໃຫ້ກັບຄືນສູ່ສະພາວະປົກກະຕິໄດ້; ຄວາມຄິດທັງໝົດຂອງພວກເຂົາແມ່ນຂັດແຍ້ງກັນ. ທຸກຄົນຢູ່ເທິງແຜ່ນດິນໂລກແມ່ນຖືກຊາຕານເຮັດໃຫ້ເສື່ອມຊາມທີ່ສຸດ. ຜູ້ຄົນບໍ່ມີຊີວິດຊີວາ ແລະ ເຕັມໄປດ້ວຍກິ່ນເໝັນຂອງຊາກສົບ. ປະຊາຊົນທັງໝົດຂອງແຜ່ນດິນໂລກແມ່ນມີຊີວິດລອດໃນທ່າມກາງການລະບາດຂອງເຊື້ອພະຍາດເຊິ່ງບໍ່ມີໃຜສາມາດຫຼົບໜີໄດ້. ພວກເຂົາບໍ່ເຕັມໃຈທີ່ຈະມີຊີວິດລອດຢູ່ເທິງແຜ່ນດິນໂລກ ແຕ່ພວກເຂົາຮູ້ສຶກສະເໝີວ່າ ມີບາງສິ່ງທີ່ຍິ່ງໃຫຍ່ກວ່າຈະເກີດຂຶ້ນ ເພື່ອໃຫ້ຜູ້ຄົນໄດ້ເຫັນດ້ວຍຕາຂອງພວກເຂົາເອງ; ດ້ວຍເຫດນັ້ນ, ຜູ້ຄົນທັງໝົດຈຶ່ງບັງຄັບຕົວເອງໃຫ້ສືບຕໍ່ມີຊີວິດຢູ່. ພວກເຂົາບໍ່ມີເຫື່ອແຮງໃນໃຈຂອງພວກເຂົາເປັນເວລາດົນນານຫຼາຍແລ້ວ; ພວກເຂົາພຽງແຕ່ໃຊ້ຄວາມຫວັງທີ່ແນມບໍ່ເຫັນຂອງພວກເຂົາເປັນເສົາຫຼັກແຫ່ງຈິດວິນຍານ ແລະ ດ້ວຍເຫດນັ້ນ ພວກເຂົາກໍຍົກຫົວຂອງພວກເຂົາຂຶ້ນ ໂດຍທຳທ່າວ່າເປັນລູກຜູ້ຊາຍ ແລະ ເຮັດສິ່ງຕ່າງໆຢ່າງມົວເມົາໄປວັນໆຢູ່ເທິງແຜ່ນດິນໂລກ. ມັນເປັນຄືກັບວ່າທຸກຄົນແມ່ນບຸດຂອງຜີຮ້າຍທີ່ບັງເກີດເປັນມະນຸດ. ນີ້ແມ່ນເຫດຜົນທີ່ພຣະເຈົ້າກ່າວວ່າ: "ຄວາມວຸ້ນວາຍປົກຄຸມໄປທົ່ວແຜ່ນດິນໂລກ ເຊິ່ງເປັນພາບທີ່ໜ້າສົມເພດທີ່ບໍ່ອາດທົນເບິ່ງໄດ້ ເມື່ອກວດສອບຢ່າງຖີ່ຖ້ວນແລ້ວ ກໍຈະໂຈມຕີຜູ້ຄົນດ້ວຍຄວາມໂສກເສົ້າຢ່າງແຮງ". ຍ້ອນສະຖານະການນີ້ໄດ້ເກີດຂຶ້ນ, ພຣະເຈົ້າຈຶ່ງໄດ້ເລີ່ມ "ຫວ່ານເມັດພືດແຫ່ງພຣະວິນຍານຂອງເຮົາ" ທົ່ວຈັກກະວານທັງໝົດ ແລະ ພຣະອົງໄດ້ເລີ່ມປະຕິບັດພາລະກິດແຫ່ງຄວາມລອດພົ້ນຂອງພຣະອົງທົ່ວແຜ່ນດິນໂລກທັງໝົດ. ມັນເປັນຍ້ອນ ການຂະຫຍາຍພາລະກິດນີ້ ທີ່ພຣະເຈົ້າໄດ້ເລີ່ມປ່ອຍໄພພິບັດທຸກຮູບແບບລົງມາ ເພື່ອຊ່ວຍມະນຸດທີ່ມີຈິດໃຈແຂງກະດ້າງໃຫ້ລອດພົ້ນ. ໃນໄລຍະຕ່າງໆຂອງພາລະກິດຂອງພຣະເຈົ້າ,

ຄວາມລອດພົ້ນຈະມີຮູບຊົງຂອງໄພພິບັດຕ່າງໆ ແລະ ບໍ່ມີຜູ້ໃດທີ່ຖືກເຄາະຮ້າຍຈະສາມາດໜີພົ້ນມັນໄດ້. ມີພຽງໃນສຸດທ້າຍເທົ່ານັ້ນ ມັນຈຶ່ງຈະສາມາດເປັນໄປໄດ້ ທີ່ຈະເຮັດໃຫ້ສະຖານະການຢູ່ເທິງແຜ່ນດິນໂລກ “ສະຫງົບຄືກັບສະຫວັນຊັ້ນສາມ: ໃນນີ້ ສິ່ງທີ່ມີຊີວິດ ທັງໃຫຍ່ ແລະ ນ້ອຍແມ່ນຢູ່ຮ່ວມກັນດ້ວຍຄວາມສັນຕິ ໂດຍບໍ່ເຄີຍມີ ‘ການຂັດແຍ້ງດ້ວຍປາກ ແລະ ລີ້ນ’ ແມ່ນແຕ່ຄັ້ງດຽວ”. ດ້ານໜຶ່ງຂອງພາລະກິດຂອງພຣະເຈົ້າແມ່ນການເອົາຊະນະມະນຸດ ແລະ ຮັບເອົາຜູ້ຄົນທີ່ຖືກເລືອກຜ່ານພຣະທຳຂອງພຣະອົງ; ອີກດ້ານໜຶ່ງແມ່ນການເອົາຊະນະບຸດແຫ່ງການກະບົດທັງໝົດດ້ວຍວິທີເຮັດໃຫ້ມີໄພພິບັດຕ່າງໆ. ນີ້ແມ່ນສ່ວນໜຶ່ງຂອງພາລະກິດຂະໜາດໃຫຍ່ຂອງພຣະເຈົ້າ. ດ້ວຍວິທີນີ້ເທົ່ານັ້ນຈຶ່ງຈະສາມາດໄດ້ຮັບອານາຈັກເທິງແຜ່ນດິນໂລກ ທີ່ພຣະເຈົ້າຕ້ອງການ ແລະ ນີ້ແມ່ນສ່ວນໜຶ່ງຂອງພາລະກິດຂອງພຣະອົງທີ່ເປັນກ້ອນຄຳບໍລິສຸດ.

ພຣະເຈົ້າຕ້ອງການໃຫ້ຜູ້ຄົນເຂົ້າໃຈພະລັງຂອງສະຫວັນຢ່າງຕໍ່ເນື່ອງ. ພວກເຂົາສາມາດບັນລຸໃນສິ່ງນີ້ໄດ້ຢ່າງແທ້ຈິງບໍ? ຄວາມເປັນຈິງກໍຄື ອີງຕາມສະພາບໃນປັດຈຸບັນ ແລະ ຕົວຈິງຂອງຜູ້ຄົນ ທີ່ຖືກຊາຕານເຮັດໃຫ້ເສື່ອມຊາມເປັນເວລາຫຼາຍກວ່າ 5.900 ປີ, ພວກເຂົາແມ່ນບໍ່ສາມາດປຽບທຽບກັບເປໂຕໄດ້; ດ້ວຍເຫດນັ້ນ, ພວກເຂົາຈຶ່ງບໍ່ສາມາດບັນລຸໃນສິ່ງນີ້ໄດ້. ນີ້ແມ່ນວິທີການໜຶ່ງຂອງພາລະກິດຂອງພຣະເຈົ້າ. ພຣະອົງຈະບໍ່ໃຫ້ຜູ້ຄົນລໍຖ້າຢູ່ຊື່ໆ; ພຣະອົງຈະໃຫ້ພວກເຂົາສະແຫວງຫາຢ່າງກະຕືລືລົ້ນແທນ. ມີພຽງດ້ວຍວິທີນີ້ເທົ່ານັ້ນ ພຣະເຈົ້າຈຶ່ງຈະມີໂອກາດເຮັດພາລະກິດໃນຜູ້ຄົນ. ມັນຈະເປັນການດີຖ້າເຮົາອະທິບາຍໃຫ້ເຈົ້າເຂົ້າໃຈຂຶ້ນໜ້ອຍໜຶ່ງ; ບໍ່ສະນັ້ນ, ຜູ້ຄົນກໍຈະພຽງແຕ່ເຂົ້າໃຈແບບຜິວເຜີນເທົ່ານັ້ນ. ຫຼັງຈາກທີ່ພຣະເຈົ້າໄດ້ສ້າງມະນຸດ ແລະ ມອບວິນຍານໃຫ້ແກ່ພວກເຂົາ, ພຣະອົງໄດ້ສັ່ງກັບພວກເຂົາວ່າ ຖ້າພວກເຂົາບໍ່ເອີ້ນຫາພຣະອົງ ແລ້ວພວກເຂົາກໍຈະບໍ່ສາມາດຕິດຕໍ່ກັບພຣະວິນຍານຂອງພຣະອົງໄດ້ ແລະ ມັນກໍເປັນໄປບໍ່ໄດ້ທີ່ຢູ່ເທິງແຜ່ນດິນໂລກຈະໄດ້ຮັບ “ໂທລະພາບດາວທຽມ” ຈາກສະຫວັນ. ເມື່ອພຣະເຈົ້າບໍ່ໄດ້ຢູ່ໃນຈິດໃຈຂອງຜູ້ຄົນອີກຕໍ່ໄປ, ມັນກໍຈະມີບ່ອນນັ່ງທີ່ເປົ່າວ່າງເຫຼືອຢູ່ສຳລັບສິ່ງອື່ນໆ ແລະ ດ້ວຍເຫດນັ້ນ ຊາຕານກໍຈະຍຶດເອົາໂອກາດນັ້ນເພື່ອເຂົ້າຄອບຄອງ. ເມື່ອຜູ້ຄົນຕິດຕໍ່ພຣະເຈົ້າດ້ວຍໃຈຂອງພວກເຂົາ, ຊາຕານກໍຈະຕື່ນຕົກໃຈທັນທີ ແລະ ຟ້າວຫຼົບໜີ. ຜ່ານການຮ້ອງໄຫ້ຂອງມະນຸດ, ພຣະເຈົ້າໄດ້ມອບສິ່ງທີ່ພວກເຂົາຕ້ອງການໃຫ້ກັບພວກເຂົາ ແຕ່ທຳອິດພຣະອົງແມ່ນບໍ່ “ອາໄສ” ຢູ່ພາຍໃນພວກເຂົາ. ພຣະອົງພຽງແຕ່ໃຫ້ຄວາມຊ່ວຍເຫຼືອແກ່ພວກເຂົາຢ່າງສະໝໍ່າສະເໝີ ຍ້ອນການຮ້ອງໄຫ້ຂອງພວກເຂົາ ແລະ ຈາກກຳລັງພາຍໃນທີ່ຜູ້ຄົນມີຢ່າງແຂງແກ່ນ ເພື່ອວ່າຊາຕານຈະບໍ່ກ້າເຂົ້າມາມີ “ບົດບາດ” ຕາມໃຈມັນ. ສະນັ້ນ, ຖ້າຜູ້ຄົນສືບຕໍ່ທີ່ຈະຕິດຕໍ່ກັບພຣະວິນຍານຂອງພຣະເຈົ້າ, ຊາຕານກໍຈະບໍ່ກ້າມາລົບກວນ. ຖ້າບໍ່ມີການລົບກວນຂອງຊາຕານ, ຊີວິດຂອງທຸກຄົນກໍຈະເປັນປົກກະຕິ ແລະ ພຣະເຈົ້າກໍຈະມີໂອກາດເຮັດພາລະກິດພາຍໃນພວກເຂົາໂດຍບໍ່ມີອຸປະສັກໃດໆ. ດ້ວຍເຫດນັ້ນ, ສິ່ງທີ່ພຣະເຈົ້າຕ້ອງການເຮັດແມ່ນສາມາດບັນລຸໄດ້ຜ່ານມະນຸດ. ຈາກສິ່ງນີ້ຈຶ່ງອາດຮູ້ໄດ້ວ່າ ເປັນຫຍັງພຣະເຈົ້າຈຶ່ງຕ້ອງການໃຫ້ຜູ້ຄົນເພີ່ມຄວາມເຊື່ອຂອງພວກເຂົາຢູ່ຕະຫຼອດ ແລະ ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ: “ເຮົາຮຽກຮ້ອງຢ່າງເໝາະສົມຕາມວຸດທິພາວະຂອງມະນຸດທີ່ຢູ່ເທິງ

ແຜ່ນດິນໂລກ. ເຮົາບໍ່ເຄີຍເຮັດໃຫ້ຜູ້ໃດຢູ່ໃນຄວາມລຳບາກ ແລະ ເຮົາບໍ່ເຄີຍຂໍໃຫ້ຜູ້ໃດ 'ບີບເລືອດຂອງເຂົາອອກມາ' ເພື່ອຄວາມສຸກຂອງເຮົາ". ຜູ້ຄົນສ່ວນໃຫຍ່ແມ່ນສັບສົນກັບຄວາມຕ້ອງການຂອງພຣະເຈົ້າ. ພວກເຂົາສົງໄສຢູ່ວ່າ ໃນເມື່ອຜູ້ຄົນບໍ່ມີຄວາມສາມາດ ແລະ ຖືກຊາຕານເຮັດໃຫ້ເສື່ອມຊາມໂດຍບໍ່ສາມາດເອົາຄືນໄດ້, ເປັນຫຍັງພຣະເຈົ້າຈຶ່ງສືບຕໍ່ສ້າງຄວາມຕ້ອງການກັບພວກເຂົາ. ນີ້ບໍ່ແມ່ນພຣະເຈົ້າເຮັດໃຫ້ຜູ້ຄົນຢູ່ໃນຕຳແໜ່ງທີ່ລຳບາກບໍ? ເມື່ອເຫັນໃບໜ້າທີ່ເຄັ່ງຂຶມຂອງພວກເຂົາ ແລະເຫັນສີໜ້າທີ່ອິດອັດຂອງພວກເຂົາ, ເຈົ້າບໍ່ສາມາດຊ່ວຍໄດ້ນອກຈາກຫົວຂວັນ. ລັກສະນະທີ່ຂີ້ຮ້າຍຕ່າງໆນາໆຂອງຜູ້ຄົນແມ່ນເປັນຕາຫົວທີ່ສຸດ: ບາງຄັ້ງ ພວກເຂົາແມ່ນຄືກັນກັບເດັກນ້ອຍທີ່ມັກຫຼິ້ນແລະ ບາງຄັ້ງ ພວກເຂົາກໍຄືກັບເດັກນ້ອຍຜູ້ຍິງທີ່ຫຼິ້ນເປັນ "ແມ່". ບາງຄັ້ງພວກເຂົາກໍຄືກັບໂຕໝາທີ່ກຳລັງກິນໂຕໜູ. ຜູ້ຄົນບໍ່ຮູ້ວ່າ ຈະຫົວ ຫຼື ຈະໄຫ້ກັບສະພາບອັນຂີ້ຮ້າຍທັງໝົດເຫຼົ່ານີ້ຂອງພວກເຂົາແລະ ຍິ່ງຜູ້ຄົນສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໜ້ອຍສ່ຳໃດ ພວກເຂົາກໍຍິ່ງຈະມີຄວາມຫຍຸ້ງຍາກຫຼາຍຂຶ້ນສ່ຳນັ້ນ. ສະນັ້ນ, ພຣະທຳຕໍ່ໄປນີ້ຂອງພຣະເຈົ້າທີ່ກ່າວວ່າ: "ເຮົາເປັນພຣະເຈົ້າທີ່ພຽງແຕ່ກຳນົດຄວາມມີດຽງບໃສ່ສິ່ງຊົງສ້າງບໍ?" ຈຶ່ງພຽງພໍທີ່ຈະສະແດງໃຫ້ເຫັນວ່າ ຜູ້ຄົນແມ່ນໂງ່ຈ້າສ່ຳໃດ ແລະ ພຣະທຳເຫຼົ່ານັ້ນຍັງສະແດງໃຫ້ເຫັນວ່າ ບໍ່ມີມະນຸດຄົນໃດສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້. ເຖິງແມ່ນວ່າ ພຣະອົງຈະບອກວ່າ ຄວາມປະສົງຂອງພຣະອົງແມ່ນຫຍັງ ແຕ່ພວກເຂົາກໍບໍ່ສາມາດພິຈາລະນາມັນໄດ້. ພວກເຂົາພຽງແຕ່ເຮັດພາລະກິດຂອງພຣະເຈົ້າຕາມຄວາມປະສົງຂອງມະນຸດ. ດ້ວຍເຫດນັ້ນ, ພວກເຂົາຈະສາມາດເຂົ້າໃຈຄວາມປະສົງຂອງພຣະອົງໄດ້ແນວໃດ? "ເຮົາໄປຍ່າງເທິງແຜ່ນດິນໂລກ, ກະຈາຍກິ່ນຫອມຫວນຂອງເຮົາໄປທຸກບ່ອນ ແລະ ປະຮູບຮ່າງຂອງເຮົາໄວ້ໃນທຸກແຫ່ງ. ແຕ່ລະບ່ອນແມ່ນມີສຽງຂອງເຮົາດັ່ງສະນັ້ນ. ຜູ້ຄົນທຸກແຫ່ງຫົນຄອງຄອຍກັບທິວທັດທີ່ສວຍງາມຂອງອະດີດ ຍ້ອນວ່າມະນຸດທັງໝົດກຳລັງຈົດຈຳອະດີດ..." ນີ້ຈະເປັນສະຖານະການໃນເວລາທີ່ອານາຈັກຖືກສ້າງຂຶ້ນ. ທີ່ຈິງແລ້ວ, ໃນຫຼາຍພື້ນທີ່ ພຣະເຈົ້າໄດ້ທຳນາຍເຖິງຄວາມສວຍງາມຂອງອານາຈັກທີ່ຖືກສ້າງຂຶ້ນ ແລະ ທຸກສິ່ງເຫຼົ່ານີ້ເມື່ອເວລາປະກອບເຂົ້າກັນກໍຈະສ້າງຮູບພາບທີ່ສົມບູນຂອງອານາຈັກ. ຢ່າງໃດກໍຕາມ, ຜູ້ຄົນບໍ່ສົນໃຈສິ່ງນີ້; ພວກເຂົາພຽງແຕ່ເບິ່ງມັນ ຄືກັບວ່າ ມັນເປັນເລື່ອງກາຕູນ.

ຍ້ອນຄວາມເສື່ອມຊາມຂອງຊາຕານເປັນເວລາຫຼາຍພັນປີ, ຜູ້ຄົນຈຶ່ງດຳລົງຊີວິດໃນຄວາມມືດຕະຫຼອດ, ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ເດືອດຮ້ອນກັບສິ່ງນີ້ ແລະ ພວກເຂົາກໍບໍ່ປາດຖະໜາແສງສະຫວ່າງ. ສິ່ງນີ້ໄດ້ນຳໄປສູ່ສິ່ງດັ່ງຕໍ່ໄປນີ້, ດັ່ງນັ້ນ, ເມື່ອແສງສະຫວ່າງມາຮອດໃນປັດຈຸບັນ: "ພວກເຂົາທຸກຄົນກຳລັງກຽດການມາຮອດຂອງເຮົາ ແລະ ພວກເຂົາຂັບໄລ່ການມາຮອດຂອງແສງສະຫວ່າງ ຄືກັບວ່າ ເຮົາແມ່ນສັດຕູຂອງມະນຸດຢູ່ສະຫວັນ. ມະນຸດທັກທາຍເຮົາດ້ວຍແສງປ້ອງກັນໃນສາຍຕາຂອງເຂົາ". ເຖິງແມ່ນວ່າ ຄົນສ່ວນໃຫຍ່ຈະພະຍາຍາມຮັກພຣະເຈົ້າດ້ວຍຄວາມຈິງໃຈ ແຕ່ພຣະອົງກໍຍັງບໍ່ພໍໃຈ ແລະ ພຣະອົງຍັງປະນາມມະນຸດ. ສິ່ງນີ້ເຮັດໃຫ້ສັບສົນຜູ້ຄົນ. ຍ້ອນພວກເຂົາດຳລົງຊີວິດໃນຄວາມມືດ ພວກເຂົາຈຶ່ງຍັງຮັບໃຊ້ພຣະເຈົ້າ ຄືດັ່ງທີ່ພວກເຂົາເຮັດໃນເວລາບໍ່ມີແສງສະຫວ່າງ. ນັ້ນກໍຄື

ທຸກຄົນຮັບໃຊ້ພຣະເຈົ້າອີງຕາມແນວຄວາມຄິດຂອງຕົວເອງ ແລະ ເມື່ອພຣະອົງມາ, ດ້ວຍສະພາບຂອງພວກເຂົາ ພວກເຂົາບໍ່ສາມາດຮັບໃຊ້ພຣະອົງດ້ວຍການຍອມຮັບເອົາແສງສະຫວ່າງໃໝ່; ກົງກັນຂ້າມ, ພວກເຂົາຮັບໃຊ້ພຣະອົງດ້ວຍປະສົບການທັງໝົດທີ່ພວກເຂົາມີ. ພຣະເຈົ້າບໍ່ໄດ້ຮັບຄວາມສຸກຈາກ "ການອຸທິດ" ຂອງມະນຸດ, ສະນັ້ນ ມະນຸດຈຶ່ງບໍ່ສາມາດສັນລະເສີນແສງສະຫວ່າງໃນຄວາມມືດໄດ້. ນີ້ແມ່ນເຫດຜົນທີ່ພຣະເຈົ້າໄດ້ກ່າວພຣະທຳຂ້າງເທິງ; ສິ່ງນີ້ບໍ່ຂັດກັບຄວາມເປັນຈິງຢ່າງແນ່ນອນ ແລະ ມັນບໍ່ແມ່ນການຂົ່ມເຫັງຂອງພຣະເຈົ້າທີ່ມີຕໍ່ມະນຸດ ແລະ ບໍ່ແມ່ນການທີ່ພຣະອົງເຮັດຜິດຕໍ່ມະນຸດ. ນັບແຕ່ການຊົງສ້າງໂລກ, ບໍ່ມີແມ່ນແຕ່ຄົນດຽວທີ່ໄດ້ຊີມລົດຊາດລອງຄວາມອົບອຸ່ນຂອງພຣະເຈົ້າຢ່າງແທ້ຈິງ; ທຸກຄົນລ້ວນແລ້ວແຕ່ລະແວງພຣະເຈົ້າ ໂດຍຢ້ານຢູ່ເລື້ອຍໆວ່າ ພຣະອົງຈະໂຈມຕີພວກເຂົາ ແລະ ທຳລາຍລ້າງພວກເຂົາ. ສະນັ້ນ, ຫຼາຍກວ່າ 6.000 ປີມານີ້ ພຣະເຈົ້າໄດ້ແລກປ່ຽນຄວາມອົບອຸ່ນກັບຄວາມຈິງໃຈຂອງມະນຸດສະເໝີ ແລະ ໄດ້ອົດທົນສືບຕໍ່ຊີ້ນຳພວກເຂົາຢູ່ທຸກແຫ່ງຫົນ. ນີ້ກໍຍ້ອນວ່າຜູ້ຄົນອ່ອນແອຫຼາຍ ແລະ ພວກເຂົາບໍ່ສາມາດຮູ້ຈັກຄວາມປະສົງຂອງພຣະເຈົ້າຢ່າງຄົບຖ້ວນ ຫຼື ຮັກພຣະອົງຢ່າງສຸດຫົວໃຈ, ນັ້ນກໍຍ້ອນວ່າພວກເຂົາບໍ່ສາມາດຊ່ວຍໄດ້ ນອກຈາກຢູ່ພາຍໃຕ້ການຄອບງຳຂອງຊາຕານ. ຢ່າງໃດກໍຕາມ, ພຣະເຈົ້າຍັງຄົງອົດທົນ ແລະ ມື້ໜຶ່ງ ຫຼັງຈາກໄດ້ອົດທົນມາຫຼາຍແລ້ວ, ນັ້ນກໍຄືເມື່ອພຣະອົງໄດ້ສ້າງໂລກຄືນໃໝ່ສຳເລັດ ພຣະອົງຈະບໍ່ເບິ່ງແຍງຜູ້ຄົນຄືດັ່ງແມ່ອີກຕໍ່ໄປ. ກົງກັນຂ້າມ, ພຣະອົງຈະມອບຜົນກຳສະໜອງທີ່ເໝາະສົມໃຫ້ແກ່ມະນຸດ. ຍ້ອນເຫດຜົນນີ້, ສິ່ງດັ່ງກ່າວນີ້ກໍຈະເກີດຂຶ້ນ: "ຊາກສົບໄຫຼໄປມາຢູ່ໜ້ານ້ຳມະຫາສະໝຸດ" ໃນຂະນະທີ່ "ຢູ່ໃນບ່ອນທີ່ບໍ່ມີນ້ຳ, ມະນຸດຄົນອື່ນແມ່ນຍັງມີຄວາມສຸກໃນທ່າມກາງສຽງຫົວ ແລະ ສຽງເພງ ເຊິ່ງເປັນຄຳສັນຍາທີ່ເຮົາໄດ້ມອບໃຫ້ພວກເຂົາ". ນີ້ແມ່ນການປຽບທຽບລະຫວ່າງຈຸດໝາຍປາຍທາງຂອງຜູ້ທີ່ຖືກລົງໂທດ ແລະ ຜູ້ທີ່ໄດ້ຮັບລາງວັນ. "ໜ້ານ້ຳມະຫາສະໝຸດ" ໝາຍເຖິງຂຸມແຫ່ງການຂ້ຽນຕີມະນຸດທີ່ເລິກທີ່ສຸດ ທີ່ພຣະເຈົ້າໄດ້ກ່າວເຖິງ. ນີ້ແມ່ນຈຸດໝາຍປາຍທາງຂອງຊາຕານ ແລະ ມັນແມ່ນ "ບ່ອນພັກຜ່ອນ" ທີ່ພຣະເຈົ້າໄດ້ຕຽມໄວ້ສຳລັບຜູ້ທີ່ຕໍ່ຕ້ານພຣະອົງ. ພຣະເຈົ້າຕ້ອງການຄວາມຮັກທີ່ແທ້ຈິງຂອງມະນຸດສະເໝີ ແຕ່ຜູ້ຄົນບໍ່ຮູ້ຈັກສິ່ງນີ້ ແລະ ບໍ່ມີຄວາມຮູ້ສຶກຕໍ່ມັນ ແລະ ຍັງເຮັດພາລະກິດຂອງພວກເຂົາເອງ. ຍ້ອນສິ່ງນີ້, ໃນພຣະທຳທັງໝົດຂອງພຣະເຈົ້າ ພຣະເຈົ້າຈຶ່ງຮຽກຮ້ອງສິ່ງຕ່າງໆຈາກຜູ້ຄົນຕະຫຼອດ ແລະ ຊີ້ໃຫ້ເຫັນເຖິງຂໍ້ບົກຜ່ອງຂອງພວກເຂົາ ແລະ ຊີ້ໃຫ້ພວກເຂົາເຫັນເສັ້ນທາງແຫ່ງການປະຕິບັດ ເພື່ອພວກເຂົາຈະໄດ້ປະຕິບັດຕາມພຣະທຳເຫຼົ່ານີ້. ພຣະອົງໄດ້ສະແດງທັດສະນະຄະຕິຂອງພຣະອົງເອງຕໍ່ຜູ້ຄົນດັ່ງນີ້: "ແຕ່ເຮົາບໍ່ເຄີຍເອົາຊີວິດມະນຸດແມ່ນແຕ່ຊີວິດດຽວຢ່າງສະບາຍ ເພື່ອເອົາມາລໍ້ຫຼິ້ນ ຄືກັບວ່າມັນເປັນຂອງຫຼິ້ນ. ເຮົາສັງເກດເບິ່ງຄວາມເຈັບປວດທີ່ມະນຸດໄດ້ຮັບ ແລະ ເຂົ້າໃຈເຖິງລາຄາທີ່ເຂົາໄດ້ຈ່າຍ. ເມື່ອເວລາທີ່ເຂົາຢືນຢູ່ຕໍ່ໜ້າເຮົາ, ເຮົາບໍ່ປາດຖະໜາທີ່ຈະລັກລອບຈັບເອົາມະນຸດ ເພື່ອຂ້ຽນຕີເຂົາ ແລະ ເຮົາບໍ່ຕ້ອງການທີ່ຈະປະທານສິ່ງທີ່ບໍ່ປາດຖະໜາໃຫ້ກັບເຂົາ. ກົງກັນຂ້າມ, ຕະຫຼອດເວລາເຮົາໄດ້ສະໜອງໃຫ້ມະນຸດ ແລະ ມອບໃຫ້ກັບເຂົາເທົ່ານັ້ນ". ເມື່ອຜູ້ຄົນອ່ານພຣະທຳເຫຼົ່ານີ້ຈາກພຣະເຈົ້າ, ພວກເຂົາແມ່ນຮູ້ສຶກທັນທີເຖິງຄວາມອົບອຸ່ນຂອງພຣະອົງ ແລະ ຄິດວ່າ: ແມ່ນແທ້, ໃນອະດີດ

ຂ້ານ້ອຍໄດ້ຊຶດໃຊ້ເພື່ອພຣະເຈົ້າ ແຕ່ຂ້ານ້ອຍກໍຍັງປະຕິບັດຕໍ່ພຣະອົງແບບພໍເປັນພິທີ ແລະ ຂ້ານ້ອຍຕຳນິພຣະອົງເປັນບາງຄັ້ງ. ພຣະເຈົ້າໄດ້ຊີ້ນຳຂ້ານ້ອຍດ້ວຍພຣະທຳຂອງພຣະອົງຕະຫຼອດ ແລະ ພຣະອົງໃຫ້ຄວາມສົນໃຈຫຼາຍຕໍ່ຊີວິດຂອງຂ້ານ້ອຍ ແຕ່ບາງຄັ້ງ ຂ້ານ້ອຍກໍຫຼິ້ນກັບພຣະທຳເຫຼົ່ານັ້ນ ຄືກັບວ່າມັນເປັນຂອງຫຼິ້ນ. ຂ້ານ້ອຍບໍ່ຄວນເຮັດສິ່ງນີ້. ພຣະເຈົ້າຮັກຂ້ານ້ອຍຫຼາຍ, ແລ້ວ ເປັນຫຍັງຂ້ານ້ອຍຈຶ່ງບໍ່ສາມາດພະຍາຍາມຢ່າງສຸດຂີດ? ເມື່ອພວກເຂົາມີຄວາມຄິດດັ່ງກ່າວ, ຜູ້ຄົນກໍຢາກຕົບໜ້າຕົວເອງຢ່າງແຮງ ຈົນວ່າດັງຂອງບາງຄົນເຖິງກັບບິດ ແລະ ພວກເຂົາກໍພາກັນຮ້ອງໄຫ້ສຽງດັງສະນັ້ນ. ພຣະເຈົ້າເຂົ້າໃຈສິ່ງທີ່ພວກເຂົາຄິດ ແລະ ເວົ້າຢ່າງດີ ແລະ ພຣະທຳບາງຂໍ້ເຫຼົ່ານີ້ ເຊິ່ງບໍ່ແຂງ ແລະ ບໍ່ອ່ອນ ໄດ້ດົນໃຈໃຫ້ຜູ້ຄົນຮັກພຣະອົງ. ສຸດທ້າຍ, ເມື່ອອານາຈັກໄດ້ຖືກສ້າງຂຶ້ນເທິງແຜ່ນດິນໂລກ ພຣະເຈົ້າກໍທຳນາຍການປ່ຽນແປງໃນພາລະກິດຂອງພຣະອົງ: ເມື່ອພຣະເຈົ້າຢູ່ເທິງແຜ່ນດິນໂລກ, ຜູ້ຄົນຈະສາມາດຫຼຸດພົ້ນຈາກຄວາມພິນາດ ແລະ ໄພພິບັດຕ່າງໆ ແລະ ຈະສາມາດໄດ້ຮັບພຣະຄຸນຂອງພຣະອົງ; ຢ່າງໃດກໍຕາມ ເມື່ອພຣະອົງເລີ່ມການພິພາກສາຂອງວັນທີ່ຍິ່ງໃຫຍ່, ມັນກໍຈະເປັນເວລາທີ່ພຣະອົງປາກົດຕົວໃນທ່າມກາງທຸກຄົນ ແລະ ພາລະກິດທັງໝົດຂອງພຣະອົງຢູ່ເທິງແຜ່ນດິນໂລກກໍຈະສຳເລັດລົງ. ໃນເວລານັ້ນ, ຍ້ອນວັນນັ້ນໄດ້ມາຮອດແລ້ວ ມັນກໍຈະເປັນດັ່ງທີ່ໄດ້ຂຽນໄວ້ໃນພຣະຄຳພີວ່າ: "ຄົນທີ່ບໍ່ຍຸຕິທຳ ກໍປ່ອຍໃຫ້ເຂົາບໍ່ຍຸຕິທຳຄືເກົ່າ ແລະ ຄົນທີ່ບໍລິສຸດກໍປ່ອຍໃຫ້ເຂົາບໍລິສຸດຄືເກົ່າ". ຄົນທີ່ບໍ່ຊອບທຳຈະຖືກຂ້ຽນຕີ ແລະ ຜູ້ທີ່ບໍລິສຸດຈະມາຢູ່ຕໍ່ໜ້າບັນລັງ. ບໍ່ມີແມ່ນແຕ່ຄົນດຽວທີ່ຈະສາມາດໄດ້ຮັບຄວາມພໍໃຈຈາກພຣະເຈົ້າ; ແມ່ນແຕ່ບຸດ ແລະ ປະຊາຊົນຂອງອານາຈັກກໍຈະບໍ່ໄດ້ຮັບ. ນີ້ແມ່ນຄວາມຊອບທຳທັງໝົດຂອງພຣະເຈົ້າ ແລະ ທັງໝົດນີ້ແມ່ນການເປີດເຜີຍອຸປະນິໄສຂອງພຣະອົງ. ພຣະອົງຈະບໍ່ສະແດງຄວາມເປັນຫ່ວງຕໍ່ຄວາມອ່ອນແອຂອງມະນຸດເປັນຄັ້ງທີສອງ.

# ບົດທີ 18

ພຣະທຳທຸກຂໍ້ຂອງພຣະເຈົ້າແມ່ນມີພາກສ່ວນກ່ຽວກັບອຸປະນິໄສຂອງພຣະອົງ. ອຸປະນິໄສຂອງພຣະເຈົ້າແມ່ນບໍ່ສາມາດສະແດງອອກຢ່າງຄົບຖ້ວນໃນພຣະທຳ ເຊິ່ງພຽງພໍທີ່ຈະສະແດງໃຫ້ເຫັນວ່າຄວາມອຸດົມສົມບູນທີ່ມີຢູ່ໃນຕົວພຣະອົງແມ່ນມີຫຼາຍສໍ່າໃດ. ສິ່ງທີ່ມະນຸດສາມາດເຫັນ ແລະ ຈັບຕ້ອງໄດ້ ແທ້ຈິງແລ້ວ ແມ່ນມີຂໍ້ຈຳກັດ, ເຊັ່ນດຽວກັນກັບຄວາມສາມາດຂອງຜູ້ຄົນ. ເຖິງວ່າ ພຣະທຳຂອງພຣະເຈົ້າຈະຊັດເຈນ ແຕ່ຜູ້ຄົນກໍບໍ່ສາມາດເຂົ້າໃຈໃນພຣະທຳເຫຼົ່ານັ້ນຢ່າງຄົບຖ້ວນ. ຈົ່ງເອົາພຣະທຳເຫຼົ່ານີ້ເປັນຕົວຢ່າງ: "ໃນແສງແມບຂອງຟ້າແມບເຫຼື້ອມ, ສັດທຸກໂຕແມ່ນຖືກເປີດເຜີຍໃນຮູບຮ່າງທີ່ແທ້ຈິງຂອງມັນ. ເຊັ່ນກັນ ດ້ວຍການເຍືອງທາງຈາກແສງສະຫວ່າງຂອງເຮົາ ມະນຸດກໍໄດ້ຮັບຄວາມບໍລິສຸດທີ່ເຂົາເຄີຍມີຄັ້ງໜຶ່ງກັບຄືນມາ. ໂອ, ໂລກທີ່ເສື່ອມຊາມຂອງອະດີດ! ໃນທີ່ສຸດ ມັນກໍຖືກຂວ້ຳລົງໄປໃນນໍ້າທີ່ສົກກະປົກ ແລະ ຈົມລົງພື້ນ ແລ້ວກໍສະຫຼາຍກາຍເປັນຂີ້ຕົມ!" ພຣະທຳທຸກຂໍ້ຂອງພຣະເຈົ້າມີຕົວຕົນຂອງພຣະອົງ ແລະ ເຖິງວ່າ ທຸກຄົນຈະຮູ້ພຣະທຳເຫຼົ່ານີ້, ບໍ່ມີຜູ້ໃດເຄີຍຮູ້ຄວາມໝາຍຂອງພຣະທຳເຫຼົ່ານີ້ເລີຍ. ໃນສາຍຕາຂອງພຣະເຈົ້າ, ທຸກຄົນທີ່ຕໍ່ຕ້ານພຣະອົງແມ່ນສັດຕູຂອງພຣະອົງນັ້ນກໍຄືຜູ້ທີ່ເປັນວິນຍານທີ່ຊົ່ວຮ້າຍແມ່ນສັດ. ຈາກສິ່ງນີ້ ຜູ້ຄົນສາມາດສັງເກດເຫັນສະພາບແທ້ຈິງຂອງຄຣິສຕະຈັກ. ພຣະທຳຂອງພຣະເຈົ້າແມ່ນເຍືອງທາງໃຫ້ມະນຸດທຸກຄົນ ແລະ ໃນແສງສະຫວ່າງນີ້ພວກເຂົາໄດ້ກວດສອບຕົວເອງໂດຍບໍ່ໄດ້ຜ່ານການສັ່ງສອນ ຫຼື ການຂ້ຽນຕີ ຫຼື ການໄລ່ຜູ້ອື່ນອອກໂດຍກົງ, ໂດຍບໍ່ໄດ້ຂຶ້ນກັບແນວທາງຂອງມະນຸດອື່ນໆໃນການເຮັດສິ່ງຕ່າງໆ ແລະ ໂດຍບໍ່ມີຜູ້ອື່ນຊີ້ນຳ. ຈາກ "ທັດສະນະນ້ອຍທີ່ສຸດ" ພວກເຂົາແມ່ນເຫັນຢ່າງຊັດເຈນວ່າ ມີຄວາມເຈັບປ່ວຍຫຼາຍສໍ່າໃດຢູ່ໃນຕົວພວກເຂົາກັນແທ້. ໃນພຣະທຳຂອງພຣະເຈົ້າ, ວິນຍານທຸກປະເພດແມ່ນຖືກຈຳແນກ ແລະ ເປີດເຜີຍໃນຮູບຮ່າງດັ່ງເດີມຂອງມັນ. ວິນຍານຂອງທູດສະຫວັນຈະມີແສງເຍືອງທາງ ແລະແສງສະຫວ່າງຫຼາຍຂຶ້ນ ເຊິ່ງດ້ວຍເຫດນັ້ນ ພຣະທຳຂອງພຣະເຈົ້າ: "ໄດ້ຮັບຄວາມບໍລິສຸດທີ່ເຂົາເຄີຍມີ". ພຣະທຳເຫຼົ່ານີ້ແມ່ນອີງໃສ່ຜົນໄດ້ຮັບສຸດທ້າຍທີ່ບັນລຸໂດຍພຣະເຈົ້າ. ແນ່ນອນ ໃນຕອນນີ້ ຜົນດັ່ງກ່າວນີ້ບໍ່ສາມາດບັນລຸໄດ້ຢ່າງເຕັມທີ່ເທື່ອ. ມັນເປັນພຽງແຕ່ລົດຊາດທີ່ໃຫ້ຊີມລ່ວງໜ້າໄວ້ກ່ອນ ເຊິ່ງສາມາດເຫັນຄວາມປະສົງຂອງພຣະເຈົ້າຜ່ານສິ່ງນີ້. ພຣະທຳເຫຼົ່ານີ້ແມ່ນພຽງພໍທີ່ຈະສະແດງໃຫ້ເຫັນວ່າ ມີຄົນຈຳນວນຫຼວງຫຼາຍທີ່ຈະແຕກເປັນສິ້ນສ່ວນພາຍໃນພຣະທຳຂອງພຣະເຈົ້າ ແລະ ຈະຖືກເອົາຊະນະໃນເທື່ອລະກ້າວໃນຂັ້ນຕອນການເຮັດໃຫ້ທຸກຄົນມີຄວາມບໍລິສຸດ. ໃນປະໂຫຍກ: "ສະຫຼາຍກາຍເປັນຂີ້ຕົມ" ບໍ່ໄດ້ຂັດກັບການທຳລາຍໂລກດ້ວຍໄຟຂອງພຣະເຈົ້າ ແລະ "ຟ້າແມບເຫຼື້ອມ" ກໍໝາຍເຖິງຄວາມໂກດຮ້າຍຂອງພຣະເຈົ້າ. ເມື່ອພຣະເຈົ້າປ່ອຍຄວາມໂກດຮ້າຍຢ່າງແຮງຂອງພຣະອົງອອກ ໂລກທັງໝົດກໍຈະປະສົບກັບໄພພິບັດທຸກຮູບແບບຍ້ອນຄວາມໂກດຮ້າຍນັ້ນ ເຊັ່ນ: ພູເຂົາໄຟລະເບີດ. ເມື່ອຢືນສູງຢູ່ໃນທ້ອງຟ້າ, ສາມາດເຫັນໄດ້ວ່າ ໄພພິບັດທຸກຮູບແບບຢູ່ເທິງແຜ່ນດິນໂລກແມ່ນເຂົ້າມາໃກ້ມະນຸດທຸກຄົນເທື່ອລະໜ້ອຍ. ເມື່ອແນມລົງລຸ່ມຈາກບ່ອນສູງ, ແຜ່ນດິນໂລກແມ່ນມີທິວທັດຕ່າງໆນາໆດັ່ງ

ທີວທັດເຫຼົ່ານັ້ນທີ່ມີຢູ່ກ່ອນເກີດແຜ່ນດິນໄຫວ. ສາຍນໍ້າແຫ່ງໄຟໄຫຼໄປທົ່ວໂດຍບໍ່ຢຸດຢັ້ງ, ນໍ້າລາວາໄຫຼຢ່າງເປັນອິດສະຫຼະ, ພູເຂົາເຄື່ອນຍ້າຍ ແລະ ແສງເຢືອກເຢັນເຫຼື້ອມຍິບຍັບໄປທົ່ວທຸກບ່ອນ. ໂລກທັງໝົດໄດ້ຈົມລົງສູ່ກອງໄຟ. ນີ້ແມ່ນພາບຂອງການທີ່ພຣະເຈົ້າປ່ອຍຄວາມໂກດຮ້າຍຂອງພຣະອົງ ແລະ ມັນແມ່ນເວລາຂອງການພິພາກສາຂອງພຣະອົງ. ທຸກຄົນທີ່ເປັນເນື້ອໜັງ ແລະ ເລືອດຈະບໍ່ສາມາດໜີພົ້ນໄດ້. ສະນັ້ນ, ສົງຄາມລະຫວ່າງປະເທດຕ່າງໆ ແລະ ຄວາມຂັດແຍ້ງລະຫວ່າງຜູ້ຄົນກໍຈະບໍ່ມີຄວາມຈຳເປັນໃນການທຳລາຍໂລກທັງໝົດ; ກົງກັນຂ້າມ, ໂລກຈະ "ມີຄວາມສຸກກັບຕົວເອງ" ພາຍໃນຈຸດກຳເກີດຂອງການຂ້ຽນຕີຂອງພຣະເຈົ້າ. ບໍ່ມີຜູ້ໃດຈະສາມາດໜີພົ້ນໄດ້; ແຕ່ລະຄົນ ແລະ ທຸກຄົນຕ້ອງຜ່ານການທໍລະມານນີ້ເທື່ອລະຄົນ. ຫຼັງຈາກນັ້ນ, ຈັກກະວານທັງໝົດຈະມີແສງບໍລິສຸດເຫຼື້ອມຍິບຍັບອີກຄັ້ງ ແລະ ມະນຸດທຸກຄົນຈະເລີ່ມຊີວິດໃໝ່ອີກຄັ້ງ. ພຣະເຈົ້າຈະພັກຜ່ອນຢູ່ເທິງຈັກກະວານ ແລະ ຈະໃຫ້ພອນແກ່ມະນຸດທຸກຄົນໃນແຕ່ລະມື້. ສະຫວັນຈະບໍ່ເປົ່າປ່ຽວຢ່າງເຫຼືອທົນອີກຕໍ່ໄປ ແຕ່ຈະຟື້ນຄືນມີຊີວິດທີ່ສະຫວັນບໍ່ເຄີຍມີນັບແຕ່ການຊົງສ້າງໂລກ ແລະ ການມາຂອງ "ມື້ທີຫົກ" ກໍຈະເປັນເວລາທີ່ພຣະເຈົ້າເລີ່ມຊີວິດໃໝ່. ທັງພຣະເຈົ້າ ແລະ ມະນຸດຈະເຂົ້າສູ່ການພັກຜ່ອນ ແລະ ຈັກກະວານຈະບໍ່ມືດມົວ ແລະ ສົກກະປົກອີກຕໍ່ໄປ ແຕ່ຈະໄດ້ຮັບການສ້າງຄືນໃໝ່. ນີ້ແມ່ນເຫດຜົນທີ່ພຣະເຈົ້າໄດ້ເວົ້າວ່າ: "ແຜ່ນດິນໂລກຈະບໍ່ຢຸດນິ້ງ ແລະ ມິດງຽບອີກຕໍ່ໄປ ແລະ ສະຫວັນຈະບໍ່ເປົ່າປ່ຽວ ແລະ ໂສກເສົ້າອີກຕໍ່ໄປ". ໃນອານາຈັກຂອງສະຫວັນ ແມ່ນບໍ່ເຄີຍມີຄວາມບໍ່ຊອບທຳ ຫຼື ຄວາມຮູ້ສຶກຂອງມະນຸດ ຫຼື ອຸປະນິໄສໃດໜຶ່ງທີ່ເສື່ອມຊາມຂອງມະນຸດຍ້ອນບໍ່ໄດ້ມີການລົບກວນຂອງຊາຕານ. "ຜູ້ຄົນ" ທັງໝົດສາມາດເຂົ້າໃຈພຣະທຳຂອງພຣະເຈົ້າ ແລະ ຊີວິດໃນສະຫວັນແມ່ນຊີວິດທີ່ເຕັມໄປດ້ວຍຄວາມສຸກ. ທຸກຄົນທີ່ຢູ່ສະຫວັນແມ່ນມີສະຕິປັນຍາ ແລະ ກຽດສັກສີຂອງພຣະເຈົ້າ. ຍ້ອນຄວາມແຕກຕ່າງລະຫວ່າງສະຫວັນ ແລະ ແຜ່ນດິນໂລກ, ປະຊາຊົນຂອງສະຫວັນຈຶ່ງບໍ່ຖືກເອີ້ນວ່າ "ຜູ້ຄົນ"; ກົງກັນຂ້າມ, ພຣະເຈົ້າເອີ້ນພວກເຂົາວ່າ "ວິນຍານ". ຄຳເວົ້າສອງຄຳເຫຼົ່ານີ້ແມ່ນມີຄວາມແຕກຕ່າງທີ່ສຳຄັນ. ຜູ້ທີ່ຕອນນີ້ຖືກເອີ້ນວ່າ "ຜູ້ຄົນ" ແມ່ນຖືກຊາຕານເຮັດໃຫ້ເສື່ອມຊາມ ໃນຂະນະທີ່ "ວິນຍານ" ບໍ່ໄດ້ຖືກເຮັດໃຫ້ເສື່ອມຊາມ. ໃນທີ່ສຸດ, ພຣະເຈົ້າຈະປ່ຽນຜູ້ຄົນແຫ່ງໂລກນີ້ໃຫ້ກາຍເປັນສິ່ງມີຊີວິດທີ່ມີຄຸນສົມບັດຂອງວິນຍານແຫ່ງສະຫວັນ ແລະ ຫຼັງຈາກນັ້ນ ພວກເຂົາກໍຈະບໍ່ຢູ່ພາຍໃຕ້ການລົບກວນຂອງຊາຕານອີກຕໍ່ໄປ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງພຣະທຳທີ່ວ່າ: "ຄວາມບໍລິສຸດຂອງເຮົາໄດ້ແຜ່ອອກໄປທົ່ວຈັກກະວານ". "ແຜ່ນດິນໂລກທີ່ຢູ່ໃນສະພາບດັ້ງເດີມຂອງມັນແມ່ນເປັນຂອງສະຫວັນ ແລະ ສະຫວັນກໍໄດ້ຮວມເຂົ້າກັນກັບແຜ່ນດິນໂລກ. ມະນຸດແມ່ນສາຍເຊືອກທີ່ຮັດສະຫວັນ ແລະ ແຜ່ນດິນໂລກເຂົ້າກັນ ແລະ ຍ້ອນຄວາມບໍລິສຸດຂອງມະນຸດ, ຍ້ອນການສ້າງມະນຸດຂຶ້ນໃໝ່, ສະຫວັນຈຶ່ງບໍ່ຖືກປິດບັງຈາກແຜ່ນດິນໂລກອີກຕໍ່ໄປ ແລະ ແຜ່ນດິນໂລກກໍບໍ່ມິດງຽບຕໍ່ສະຫວັນອີກຕໍ່ໄປ". ການກ່າວນີ້ແມ່ນໝາຍເຖິງຜູ້ຄົນທີ່ມີວິນຍານຂອງທູດສະຫວັນ ແລະ ໃນຈຸດນີ້ "ທູດສະຫວັນ" ຈະສາມາດມີຊີວິດຮ່ວມກັນຢ່າງສະຫງົບສຸກອີກຄັ້ງ ແລະ ໄດ້ຮັບສະພາບດັ້ງເດີມຂອງພວກເຂົາຄືນ ໂດຍບໍ່ຖືກແຍກອອກດ້ວຍເນື້ອໜັງລະຫວ່າງໂລກແຫ່ງສະຫວັນ ແລະ ແຜ່ນດິນໂລກອີກຕໍ່ໄປ. "ທູດສະຫວັນ"

ຢູ່ເທິງແຜ່ນດິນໂລກຈະສາມາດສື່ສານກັບທູດສະຫວັນໃນສະຫວັນ, ຜູ້ຄົນຢູ່ເທິງແຜ່ນດິນໂລກຈະຮູ້ຄວາມລຶກລັບຂອງສະຫວັນ ແລະ ທູດສະຫວັນໃນສະຫວັນກໍຈະຮູ້ຄວາມລັບຂອງໂລກມະນຸດ. ສະຫວັນ ແລະ ແຜ່ນດິນໂລກຈະຮ່ວມກັນ ໂດຍບໍ່ມີໄລຍະຫ່າງລະຫວ່າງທັງສອງ. ນີ້ແມ່ນຄວາມງົດງາມຂອງອານາຈັກທີ່ເປັນຈິງ. ມັນແມ່ນສິ່ງທີ່ພຣະເຈົ້າຈະເຮັດໃຫ້ສຳເລັດ ແລະ ມັນແມ່ນສິ່ງທີ່ມະນຸດ ແລະ ວິນຍານທັງໝົດປາດຖະໜາ. ແຕ່ຜູ້ທີ່ຢູ່ໃນໂລກສາສະໜາຈະບໍ່ຮູ້ຫຍັງກ່ຽວກັບສິ່ງນີ້. ພວກເຂົາພຽງແຕ່ລໍຖ້າພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນມາເທິງກ້ອນເມກສີຂາວ ແລະ ເອົາວິນຍານຂອງພວກເຂົາໄປ ໂດຍຖິ້ມ "ຂີ້ເຫຍື້ອ" ໄປທົ່ວແຜ່ນດິນໂລກ ("ຂີ້ເຫຍື່ອ" ໃນນີ້ໝາຍເຖິງຊາກສົບ). ນີ້ບໍ່ແມ່ນແນວຄວາມຄິດທີ່ມະນຸດທຸກຄົນມີຮ່ວມກັນບໍ? ນີ້ແມ່ນເຫດຜົນທີ່ພຣະເຈົ້າໄດ້ເວົ້າວ່າ: "ໂອ ໂລກແຫ່ງສາສະໜາເອີຍ! ມັນຈະບໍ່ຖືກທຳລາຍດ້ວຍລິດອຳນາດຂອງເຮົາຢູ່ເທິງໂລກໄດ້ແນວໃດ?" ຍ້ອນຄວາມສົມບູນຂອງປະຊາຊົນຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ, ໂລກສາສະໜາຈຶ່ງຖືກປ່ຽນແປງ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງ "ອຳນາດ" ທີ່ພຣະເຈົ້າເວົ້າເຖິງ. ພຣະເຈົ້າເວົ້າວ່າ: "ໃນມື້ຂອງເຮົາ ແມ່ນມີຜູ້ໃດບໍ ທີ່ເຮັດໃຫ້ຊື່ຂອງເຮົາເສື່ອມເສຍ? ມະນຸດທຸກຄົນຈ້ອງເບິ່ງເຮົາດ້ວຍຄວາມເຄົາລົບນັບຖື ແລະ ໃນໃຈຂອງພວກເຂົາ ພວກເຂົາກໍຮ້ອງຫາເຮົາຢ່າງລັບໆ". ນີ້ແມ່ນສິ່ງທີ່ພຣະອົງເວົ້າກ່ຽວກັບຜົນສະທ້ອນຂອງການທຳລາຍໂລກສາສະໜາ. ໂລກດັ່ງກ່າວທັງໝົດຈະອ່ອນນ້ອມຕໍ່ໜ້າບັນລັງຂອງພຣະເຈົ້າຍ້ອນພຣະທຳຂອງພຣະອົງ ແລະ ຈະບໍ່ລໍຖ້າໃຫ້ເມກສີຂາວລົງມາ ຫຼື ຈ້ອງເບິ່ງທ້ອງຟ້າອີກຕໍ່ໄປ ແຕ່ຈະຖືກເອົາຊະນະຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າແທນ. ສະນັ້ນ ພຣະທຳທີ່ວ່າ: "ໃນໃຈຂອງພວກເຂົາ ພວກເຂົາກໍຮ້ອງຫາເຮົາຢ່າງລັບໆ" ເຊິ່ງນີ້ຈະເປັນຜົນໄດ້ຮັບສຳລັບໂລກສາສະໜາ ທີ່ພຣະເຈົ້າຈະເອົາຊະນະຈົນໝົດ. ນີ້ແມ່ນສິ່ງທີ່ລິດທານຸພາບສູງສຸດຂອງພຣະເຈົ້າທີ່ພຣະອົງໝາຍເຖິງ ເຊິ່ງເປັນການໂຈມຕີຜູ້ຄົນທາງສາສະໜາທັງໝົດ ທີ່ເປັນມະນຸດທີ່ກະບົດທີ່ສຸດ ເພື່ອວ່າ ພວກເຂົາຈະບໍ່ມີວັນຍຶດຕິດກັບຄວາມຄິດຂອງຕົວເອງອີກຕໍ່ໄປຈົນເຖິງຂັ້ນພວກເຂົາອາດຈະບໍ່ຮູ້ຈັກພຣະເຈົ້າ.

ເຖິງແມ່ນວ່າ ພຣະທຳຂອງພຣະເຈົ້າຈະໄດ້ທຳນາຍໄວ້ລ່ວງໜ້າຊໍ້າແລ້ວຊໍ້າອີກເຖິງຄວາມສວຍງາມຂອງອານາຈັກ, ໄດ້ເວົ້າເຖິງພາກສ່ວນຕ່າງໆຂອງມັນ ແລະ ໄດ້ພັນລະນາເຖິງມັນຈາກມຸມມອງທີ່ແຕກຕ່າງ ແຕ່ພວກເຂົາກໍຍັງບໍ່ສາມາດສະແດງອອກເຖິງສະພາບທັງໝົດຂອງຍຸກແຫ່ງອານາຈັກຢ່າງຄົບຖ້ວນຍ້ອນຄວາມສາມາດຮັບຂອງຜູ້ຄົນຍັງຂາດເຂີນຫຼາຍ. ໄດ້ມີການກ່າວຖ້ອຍຄຳທັງໝົດຂອງພຣະວັດຈະນະຂອງພຣະອົງ ແຕ່ຄົນບໍ່ໄດ້ເບິ່ງຢູ່ພາຍໃນພວກເຂົາຜ່ານເຄື່ອງກຳເນີດພາບລັງສີ ດ້ວຍເອັກສະເຣ ດັ່ງທີ່ມັນເປັນ ແລະ ປາສະຈາດຄວາມຊັດເຈນ ແລະ ຄວາມເຂົ້າໃຈ ແລະ ເຖິງກັບມືນງົງ. ນີ້ແມ່ນຂໍ້ບົກຜ່ອງຢ່າງໃຫຍ່ຫຼວງທີ່ສຸດຂອງເນື້ອໜັງ. ເຖິງວ່າ ໃນໃຈຂອງພວກເຂົາ ຜູ້ຄົນຕ້ອງການທີ່ຈະຮັກພຣະເຈົ້າ ແຕ່ພວກເຂົາກໍຕໍ່ຕ້ານພຣະອົງຍ້ອນການລົບກວນຂອງຊາຕານ. ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງໄດ້ສຳຜັດຫົວໃຈທີ່ຕາຍດ້ານ ແລະ ມຶນຊາຂອງຜູ້ຄົນຊໍ້າແລ້ວຊໍ້າອີກ ເພື່ອວ່າພວກເຂົາອາດຟື້ນຄືນຊີບ. ທຸກສິ່ງທີ່ພຣະເຈົ້າເປີດເຜີຍແມ່ນເພື່ອຄວາມຂີ້ຮ້າຍຂອງຊາຕານ, ສະນັ້ນ ຍິ່ງພຣະທຳຂອງພຣະເຈົ້າໂຫດຮ້າຍ ຊາຕານກໍຍິ່ງອັບອາຍຫຼາຍຂຶ້ນ, ຫົວໃຈຂອງຜູ້ຄົນຍິ່ງຖືກຜູກມັດໜ້ອຍລົງ ແລະ

ຄວາມຮັກຂອງຜູ້ຄົນກໍສາມາດຖືກກະຕຸ້ນຫຼາຍຂຶ້ນ. ນີ້ແມ່ນວິທີພຣະເຈົ້າເຮັດພາລະກິດ. ຍ້ອນຊາຕານຖືກເປີດເຜີຍ ແລະ ຍ້ອນມັນຖືກເບິ່ງຜ່ານ, ມັນຈຶ່ງບໍ່ກ້າຄອບງຳຫົວໃຈຂອງຜູ້ຄົນອີກຕໍ່ໄປ ແລະ ດ້ວຍເຫດນັ້ນ ທູດສະຫວັນຈຶ່ງບໍ່ຖືກລົບກວນອີກຕໍ່ໄປ. ດ້ວຍວິທີນີ້, ພວກເຂົາຈຶ່ງຮັກພຣະທຳດ້ວຍຫົວໃຈ ແລະ ຈິດໃຈທັງໝົດຂອງພວກເຂົາ. ໃນຕອນນີ້ເທົ່ານັ້ນ ທີ່ມັນເຫັນໄດ້ຊັດເຈນວ່າ ໃນຕົວຕົນທີ່ແທ້ຈິງຂອງພວກເຂົາ ທູດສະຫວັນເປັນຂອງພຣະເຈົ້າ ແລະ ຮັກພຣະເຈົ້າ. ດ້ວຍເສັ້ນທາງນີ້ເທົ່ານັ້ນຈຶ່ງຈະສາມາດບັນລຸຄວາມປະສົງຂອງພຣະເຈົ້າ. "ພາຍໃນຫົວໃຈຂອງມະນຸດຊາດທຸກຄົນ ຕອນນີ້ພາຍໃນໃຈຂອງພວກເຂົາແມ່ນມີບ່ອນສຳລັບເຮົາ. ເຮົາຈະບໍ່ໄດ້ພົບກັບຄວາມລັງກຽດ ຫຼື ການປະຕິເສດໃນທ່າມກາງມະນຸດອີກຕໍ່ໄປ ເນື່ອງຈາກພາລະກິດທີ່ຍິ່ງໃຫຍ່ຂອງເຮົາໄດ້ສຳເລັດແລ້ວ ແລະ ບໍ່ຖືກກີດຂວາງອີກຕໍ່ໄປ". ນີ້ແມ່ນຄວາມໝາຍຂອງສິ່ງທີ່ອະທິບາຍຢູ່ຂ້າງເທິງ. ຍ້ອນການລົບກວນຂອງຊາຕານ, ຜູ້ຄົນຈຶ່ງບໍ່ສາມາດຊອກຫາເວລາຮັກພຣະເຈົ້າ ແລະ ໄດ້ໝົກມຸ້ນຢູ່ກັບສິ່ງຕ່າງໆທາງຝ່າຍໂລກຕະຫຼອດ ແລະ ຖືກຊາຕານຫຼອກລວງ ດັ່ງນັ້ນ ພວກເຂົາຈຶ່ງກະທຳການດ້ວຍຄວາມສັບສົນ. ນີ້ແມ່ນເຫດຜົນທີ່ພຣະເຈົ້າເວົ້າວ່າມະນຸດ: "ໄດ້ປະສົບກັບຄວາມລຳບາກຂອງຊີວິດຢ່າງຫຼວງຫຼາຍ, ຄວາມບໍ່ຍຸຕິທຳຂອງໂລກຢ່າງຫຼວງຫຼາຍ, ການປ່ຽນແປງໃນຊີວິດຂອງໂລກມະນຸດຢ່າງຫຼວງຫຼາຍ ແຕ່ຕອນນີ້ພວກເຂົາອາໄສຢູ່ໃນແສງສະຫວ່າງຂອງເຮົາ. ຜູ້ໃດທີ່ບໍ່ຮ້ອງໄຫ້ກັບຄວາມບໍ່ຍຸຕິທຳໃນອະດີດ?" ເມື່ອຜູ້ຄົນໄດ້ຍິນພຣະທຳເຫຼົ່ານີ້ ພວກເຂົາກໍຮູ້ສຶກຄືກັບວ່າ ພຣະເຈົ້າແມ່ນຄູ່ຮ່ວມໃນຄວາມທຸກທໍລະມານ, ເສຍໃຈນຳພວກເຂົາ ແລະ ໃນເວລານັ້ນ ກໍກຳລັງແບ່ງປັນຄວາມບໍ່ພໍໃຈຂອງພວກເຂົາ. ພວກເຂົາຮູ້ສຶກເຖິງຄວາມເຈັບປວດຂອງໂລກມະນຸດທັນທີ ແລະ ຄິດວ່າ: "ນັ້ນຄືຄວາມຈິງ. ຂ້ານ້ອຍບໍ່ເຄີຍມີຄວາມສຸກກັບສິ່ງໃດໃນໂລກ. ນັບແຕ່ອອກມາຈາກທ້ອງແມ່ຂອງຂ້ານ້ອຍຈົນຮອດປັດຈຸບັນ, ຂ້ານ້ອຍໄດ້ປະສົບກັບຊີວິດມະນຸດ ແລະ ຂ້ານ້ອຍບໍ່ໄດ້ຮັບສິ່ງໃດ ແຕ່ຂ້ານ້ອຍໄດ້ທົນທຸກຢ່າງໜັກ. ທຸກສິ່ງວ່າງເປົ່າຈົນໝົດ! ຕອນນີ້ຂ້ານ້ອຍຖືກຊາຕານເຮັດໃຫ້ເສື່ອມຊາມ! ໂອ້! ຖ້າບໍ່ແມ່ນຍ້ອນຄວາມລອດພົ້ນຂອງພຣະເຈົ້າ, ເມື່ອເວລາຕາຍຂອງຂ້ານ້ອຍມາເຖິງ ຂ້ານ້ອຍກໍຈະບໍ່ໄດ້ໃຊ້ຊີວິດທັງໝົດຂອງຂ້ານ້ອຍໂດຍບໍ່ມີປະໂຫຍດຫຍັງບໍ? ແລ້ວມີຄວາມໝາຍຫຍັງໃນຊີວິດມະນຸດ? ສົມພໍພຣະເຈົ້າຈຶ່ງເວົ້າວ່າ ທຸກສິ່ງພາຍໃຕ້ດວງຕາເວັນແມ່ນວ່າງເປົ່າ. ຖ້າພຣະເຈົ້າບໍ່ໄດ້ໃຫ້ແສງສະຫວ່າງແກ່ຂ້ານ້ອຍໃນປັດຈຸບັນ ຂ້ານ້ອຍກໍຄົງຈະຍັງຢູ່ໃນຄວາມມືດ. ຈັ່ງແມ່ນເປັນຕາເວດທະນາແທ້ເດ!" ໃນຈຸດນີ້, ໃນໃຈຂອງພວກເຂົາກໍເກີດມີຄວາມສົງໄສວ່າ: "ຖ້າຂ້ານ້ອຍບໍ່ສາມາດໄດ້ຮັບຄຳສັນຍາຂອງພຣະເຈົ້າ ແລ້ວຂ້ານ້ອຍຈະສາມາດສືບຕໍ່ປະສົບກັບຊີວິດໄດ້ແນວໃດ?" ທຸກຄົນທີ່ອ່ານພຣະທຳເຫຼົ່ານີ້ຈະມີນ້ຳຕາໄຫຼໃນຂະນະທີ່ພວກເຂົາອະທິຖານ. ນັ້ນແມ່ນຈິດໃຈຂອງມະນຸດ. ມັນເປັນໄປບໍ່ໄດ້ທີ່ຈະໃຫ້ບາງຄົນອ່ານສິ່ງນີ້ ແລະ ບໍ່ມີປະຕິກິລິຍາໃດໆ ນອກຈາກວ່າ ພວກເຂົາຈະປ່ວຍທາງຈິດ. ທຸກມື້ ພຣະເຈົ້າເປີດເຜີຍສະພາບຂອງຄົນທຸກປະເພດ. ບາງຄັ້ງພຣະອົງລະບາຍຄວາມບໍ່ພໍໃຈແທນພວກເຂົາ. ບາງຄັ້ງພຣະອົງຊ່ວຍຜູ້ຄົນເອົາຊະນະ ແລະ ຜ່ານສະພາບແວດລ້ອມຕ່າງໆຢ່າງປະສົບຜົນສຳເລັດ. ບາງຄັ້ງພຣະອົງຊີ້ໃຫ້ພວກເຂົາເຫັນ "ການປ່ຽນແປງ" ຂອງຜູ້ຄົນ. ບໍ່ສະນັ້ນ, ຜູ້ຄົນຈະບໍ່ຮູ້ວ່າພວກເຂົາເຕີບໃຫຍ່ໃນຊີວິດຫຼາຍປານໃດ.

ບາງຄັ້ງພຣະເຈົ້າຊີ້ໃຫ້ເຫັນປະສົບການຂອງຜູ້ຄົນໃນຄວາມເປັນຈິງ ແລະ ບາງຄັ້ງພຣະອົງກໍຊີ້ໃຫ້ເຫັນຄວາມຂາດເຂີນ ແລະ ຂໍ້ບົກຜ່ອງຂອງພວກເຂົາ. ບາງຄັ້ງພຣະອົງສ້າງຄວາມຕ້ອງການໃໝ່ສຳລັບພວກເຂົາ ແລະ ບາງຄັ້ງພຣະອົງກໍຊີ້ໃຫ້ເຫັນລະດັບທີ່ພວກເຂົາເຂົ້າໃຈພຣະອົງ. ຢ່າງໃດກໍຕາມ, ພຣະອົງຍັງເວົ້າວ່າ: "ເຮົາໄດ້ຍິນຄຳເວົ້າຈິງໃຈທີ່ກ່າວໂດຍຫຼາຍຄົນ ເຊິ່ງເປັນການອະທິບາຍຈາກຫຼາຍຄົນກ່ຽວກັບປະສົບການທີ່ເຈັບປວດຂອງພວກເຂົາໃນທ່າມກາງຄວາມທໍລະມານ; ໃນຄວາມຍາກລຳບາກທີ່ຮ້າຍແຮງທີ່ສຸດ, ເຮົາໄດ້ເຫັນຫຼາຍຄົນຖວາຍຄວາມຈົງຮັກພັກດີຂອງພວກເຂົາໃຫ້ກັບເຮົາຢ່າງບໍ່ສິ້ນສຸດ ແລະ ເຮົາໄດ້ເບິ່ງຫຼາຍຄົນຊອກຫາທາງອອກຂະນະທີ່ພວກເຂົາຍ່າງຢູ່ເສັ້ນທາງທີ່ເຕັມໄປດ້ວຍກ້ອນຫີນ". ນີ້ແມ່ນຄຳອະທິບາຍຂອງຕົວລະຄອນທີ່ເປັນບວກ. ໃນແຕ່ລະຕອນຂອງ "ລະຄອນກ່ຽວກັບປະຫວັດສາດມະນຸດ" ແມ່ນບໍ່ໄດ້ມີແຕ່ຕົວລະຄອນທີ່ເປັນບວກເທົ່ານັ້ນ ແຕ່ມີຕົວລະຄອນທີ່ເປັນລົບອີກດ້ວຍ. ດັ່ງນັ້ນ, ພຣະເຈົ້າຈຶ່ງໄດ້ສືບຕໍ່ເປີດເຜີຍຄວາມຂີ້ຮ້າຍຂອງຕົວລະຄອນທີ່ເປັນລົບເຫຼົ່ານີ້. ສະນັ້ນ, ຄວາມຈົງຮັກພັກດີທີ່ບໍ່ອ່ອນນ້ອມ ແລະ ຄວາມກ້າຫານທີ່ບໍ່ຢ້ານຫຍັງຂອງ "ມະນຸດທີ່ຊື່ສັດ" ຈຶ່ງຖືກເປີດເຜີຍຜ່ານຄວາມແຕກຕ່າງຂອງພວກເຂົາກັບ "ຄົນທໍລະຍົດ" ເທົ່ານັ້ນ. ໃນຊີວິດຂອງທຸກຄົນແມ່ນມີປັດໄຈທີ່ເປັນລົບ ແລະ ຍັງມີປັດໄຈທີ່ເປັນບວກໂດຍບໍ່ມີຂໍ້ຍົກເວັ້ນ. ພຣະເຈົ້າໃຊ້ທັງສອງເພື່ອເປີດເຜີຍຄວາມຈິງກ່ຽວກັບທຸກຄົນ ເພື່ອວ່າ ຄົນທໍລະຍົດຈະກົ້ມຫົວຂອງພວກເຂົາ ແລະ ຍອມຮັບບາບຂອງພວກເຂົາ ແລະ ເພື່ອວ່າ ດ້ວຍແຮງຈູງໃຈ ມະນຸດທີ່ຊື່ສັດຈະສືບຕໍ່ຈົງຮັກພັກດີ. ຄວາມໝາຍທີ່ແອບແຝງຂອງພຣະທຳຂອງພຣະເຈົ້າແມ່ນເລິກເຊິ່ງຫຼາຍ. ບາງຄັ້ງຜູ້ຄົນອ່ານພຣະທຳເຫຼົ່ານັ້ນ ແລ້ວກໍຂົດໂຕພ້ອມທັງຫົວຂຶ້ນຢ່າງແຮງ ແລະ ບາງຄັ້ງ ພວກເຂົາກໍເຮັດເປັນຄຳຕົກ ມິດງຽບຢູ່ເທົ່ານັ້ນ. ບາງຄັ້ງພວກເຂົາລະລຶກເຖິງອະດີດ, ບາງຄັ້ງພວກເຂົາຮ້ອງໄຫ້ຢ່າງຂົມຂື່ນ ແລະ ຍອມຮັບບາບຂອງພວກເຂົາ, ບາງຄັ້ງພວກເຂົາເຮັດຜິດພາດ ແລະ ບາງຄັ້ງພວກເຂົາກໍສະແຫວງຫາ. ໂດຍລວມແລ້ວ ແມ່ນມີການປ່ຽນແປງໃນປະຕິກິລິຍາຂອງຜູ້ຄົນ ຍ້ອນພຣະເຈົ້າເວົ້າໃນສະຖານະການທີ່ແຕກຕ່າງກັນ. ເມື່ອຄົນອ່ານພຣະທຳຂອງພຣະເຈົ້າ, ບາງຄັ້ງຜູ້ຢືນເບິ່ງອາດເຊື່ອຢ່າງຜິດໆວ່າ ຄົນຜູ້ນັ້ນແມ່ນບໍ່ສະບາຍທາງຈິດ. ໃຫ້ພິຈາລະນາພຣະທຳເຫຼົ່ານີ້ທີ່ວ່າ: "ສະນັ້ນ, ຄວາມຂັດແຍ້ງທີ່ມັກເກີດຂຶ້ນຢູ່ແຜ່ນດິນໂລກກໍຈະບໍ່ມີອີກຕໍ່ໄປ ແລະ ຫຼັງຈາກການອອກພຣະທຳຂອງເຮົາ 'ອາວຸດ' ຕ່າງໆຂອງສະໄໝໃໝ່ແມ່ນຖືກຖອນຄືນ". ຄຳວ່າ "ອາວຸດ" ເທົ່ານັ້ນສາມາດເຮັດໃຫ້ມີສຽງຫົວໝົດມື້ໄດ້ ແລະ ເມື່ອໃດກໍຕາມທີ່ມີບາງຄົນຄິດເຖິງຄຳທີ່ວ່າ "ອາວຸດ" ໂດຍບັງເອີນ ພວກເຂົາກໍຈະຫົວຂວັນກັບຕົວເອງຢ່າງແຮງ. ບໍ່ແມ່ນແບບນີ້ບໍ? ເຈົ້າບໍ່ຫົວຂວັນໃນສິ່ງນີ້ໄດ້ແນວໃດ?

ເມື່ອເຈົ້າຫົວຂວັນ, ຈົ່ງຢ່າລືມທີ່ຈະເຂົ້າໃຈຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ມະນຸດຊາດ ແລະ ຈົ່ງຢ່າລືມເບິ່ງສະພາບທີ່ແທ້ຈິງຂອງຄຣິສຕະຈັກ: "ມະນຸດທຸກຄົນໄດ້ກັບຄືນສູ່ສະພາບປົກກະຕິ ແລະ ເລີ່ມຊີວິດໃໝ່. ເມື່ອອາໄສຢູ່ໃນສະພາບແວດລ້ອມໃໝ່ ກໍມີຜູ້ຄົນຈຳນວນຫຼາຍທີ່ພາກັນເບິ່ງອ້ອມຮອບສິ່ງເຫຼົ່ານັ້ນ, ຮູ້ສຶກຄືກັບວ່າ ພວກເຂົາໄດ້ເຂົ້າສູ່ໂລກໃໝ່ທັງໝົດ ແລະ ຍ້ອນສິ່ງນີ້ ພວກເຂົາຈຶ່ງບໍ່ສາມາດປັບຕົວໃຫ້ເຂົ້າກັບສະພາບແວດລ້ອມປັດຈຸບັນໄດ້ທັນທີ ຫຼື ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງທັນທີ".

ນີ້ແມ່ນສະພາບທີ່ແທ້ຈິງໃນປັດຈຸບັນຂອງຄຣິສຕະຈັກ. ຈົ່ງຢ່າກະວົນກະວາຍຫຼາຍໃນການເຮັດໃຫ້ທຸກຄົນເຂົ້າໄປສູ່ເສັ້ນທາງທີ່ຖືກຕ້ອງທັນທີ. ເມື່ອພາລະກິດຂອງພຣະວິນຍານບໍລິສຸດໄດ້ຄືບໜ້າໄປຮອດຈຸດໃດໜຶ່ງ ທຸກຄົນກໍຈະເຂົ້າສູ່ເສັ້ນທາງນັ້ນໂດຍບໍ່ຮູ້ຕົວ. ເມື່ອເຈົ້າເຂົ້າໃຈແກ່ນແທ້ຂອງພຣະທຳຂອງພຣະເຈົ້າ ເຈົ້າຈະຮູ້ວ່າ ພຣະວິນຍານໄດ້ເຮັດພາລະກິດຮອດຈຸດໃດໜຶ່ງແລ້ວ. ຄວາມປະສົງຂອງພຣະເຈົ້າແມ່ນ: “ໂດຍອີງຕາມຄວາມບໍ່ຊອບທຳຂອງມະນຸດ, ເຮົາພຽງແຕ່ໃຊ້ມາດຕະການ ‘ສຶກສາອົບຮົມ’ ທີ່ເໝາະສົມ ເພື່ອເຮັດໃຫ້ທຸກຄົນເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໄດ້ດີຂຶ້ນ”. ນີ້ແມ່ນວິທີເວົ້າ ແລະ ເຮັດພາລະກິດຂອງພຣະເຈົ້າ ແລະ ມັນຍັງແມ່ນເສັ້ນທາງແຫ່ງການປະຕິບັດແບບສະເພາະຂອງມະນຸດ. ຫຼັງຈາກນີ້, ພຣະອົງໄດ້ຊີ້ໃຫ້ຜູ້ຄົນເຫັນສະພາບອື່ນຂອງມະນຸດ: “ຖ້າມະນຸດບໍ່ເຕັມໃຈທີ່ຈະຮັບເອົາຄວາມສຸກຢູ່ໃນຕົວເຮົາ, ເຮົາກໍພຽງໄດ້ແຕ່ເຫັນດີນຳເທົ່ານັ້ນກັບສິ່ງທີ່ພວກເຂົາຕັ້ງໃຈໃສ່ ແລະ ສົ່ງພວກເຂົາໄປສູ່ຂຸມເລິກທີ່ສຸດ”. ພຣະເຈົ້າເວົ້າທຸກສິ່ງຢ່າງລະອຽດ ແລະ ບໍ່ປ່ອຍໃຫ້ຜູ້ຄົນມີໂອກາດແມ່ນແຕ່ໜ້ອຍດຽວທີ່ຈະຈົ່ມ. ນີ້ແມ່ນຄວາມແຕກຕ່າງລະຫວ່າງພຣະເຈົ້າ ແລະ ມະນຸດຢ່າງແທ້ຈິງ. ພຣະເຈົ້າເວົ້າກັບມະນຸດຢ່າງເປີດເຜີຍ ແລະ ຢ່າງເປັນອິດສະຫຼະຕະຫຼອດ. ໃນທຸກສິ່ງທີ່ພຣະເຈົ້າເວົ້າ, ຜູ້ຄົນສາມາດເຫັນຫົວໃຈທີ່ຈິງໃຈຂອງພຣະອົງ ເຊິ່ງເຮັດໃຫ້ຜູ້ຄົນວັດແທກຫົວໃຈຂອງພວກເຂົາເອງກັບຫົວໃຈຂອງພຣະອົງ ແລະ ເຮັດໃຫ້ພວກເຂົາສາມາດເປີດໃຈຂອງພວກເຂົາກັບພຣະອົງ ຈົນພຣະອົງສາມາດເຫັນວ່າ ພວກເຂົາຈະຕົກຢູ່ໃນສີໃດຂອງສາຍຮຸ້ງ. ພຣະເຈົ້າບໍ່ເຄີຍສັນລະເສີນຄວາມເຊື່ອ ຫຼື ຄວາມຮັກຂອງຜູ້ໃດ ແຕ່ພຣະອົງໄດ້ສ້າງຄວາມຕ້ອງການກັບຜູ້ຄົນຕະຫຼອດ ແລະ ເປີດເຜີຍດ້ານທີ່ຂີ້ຮ້າຍຂອງພວກເຂົາ. ນີ້ສະແດງໃຫ້ເຫັນວ່າ “ວຸດທິພາວະ” ທີ່ຜູ້ຄົນມີນັ້ນຕໍ່າສໍ່າໃດ ແລະ “ການຈັດຕັ້ງ” ຂອງພວກເຂົາແມ່ນຂາດເຂີນສໍ່າໃດ. ພວກເຂົາຕ້ອງການ “ອອກກຳລັງກາຍ” ເພີ່ມເພື່ອທົດແທນຄວາມຂາດເຂີນເຫຼົ່ານີ້ ເຊິ່ງເປັນເຫດຜົນທີ່ພຣະເຈົ້າໄດ້ “ປ່ອຍຄວາມໂກດຮ້າຍຂອງພຣະອົງ” ໃສ່ຜູ້ຄົນຢ່າງຕໍ່ເນື່ອງ. ໃນມື້ໜຶ່ງ ເມື່ອພຣະເຈົ້າໄດ້ເປີດເຜີຍຄວາມຈິງທັງໝົດກ່ຽວກັບມະນຸດຊາດ, ຜູ້ຄົນກໍຈະຖືກເຮັດໃຫ້ສົມບູນ ແລະ ພຣະເຈົ້າກໍຈະຮູ້ສຶກສະບາຍໃຈ. ຜູ້ຄົນຈະບໍ່ຍົວະພຣະເຈົ້າອີກຕໍ່ໄປ ແລະ ພຣະອົງກໍຈະບໍ່ “ສຶກສາອົບຮົມ” ພວກເຂົາອີກຕໍ່ໄປ. ຫຼັງຈາກນັ້ນ ຜູ້ຄົນກໍຈະສາມາດ “ດຳລົງຊີວິດດ້ວຍຕົວເອງ” ແຕ່ຕອນນີ້ບໍ່ແມ່ນເວລານັ້ນເທື່ອ. ຍັງມີຫຼາຍສິ່ງພາຍໃນຜູ້ຄົນທີ່ສາມາດເອີ້ນໄດ້ວ່າ “ປອມ” ແລະ ມີຄວາມຈຳເປັນຕ້ອງເຮັດການກວດສອບອີກຫຼາຍຮອບ ໂດຍມີ “ຈຸດກວດກາ” ຫຼາຍບ່ອນເພີ່ມ ເຊິ່ງເປັນບ່ອນທີ່ສາມາດຈ່າຍ “ພາສີອາກອນ” ຂອງພວກເຂົາໄດ້ຢ່າງຖືກຕ້ອງ. ຖ້າຍັງມີສິນຄ້າປອມ, ສິ່ງເຫຼົ່ານັ້ນກໍຈະຖືກຍຶດ ເພື່ອວ່າ ສິ່ງເຫຼົ່ານັ້ນຈະບໍ່ຖືກນຳໄປຂາຍ ແລະ ຫຼັງຈາກນັ້ນຊຸດສິນຄ້າທີ່ຖືກຫຼັກລອບເຂົ້າມາກໍຈະຖືກລຳລາຍ. ນີ້ບໍ່ແມ່ນແນວທາງທີ່ດີໃນການເຮັດສິ່ງຕ່າງໆບໍ?

# ບົດທີ 19

ໃນຈິນຕະນາການຂອງຜູ້ຄົນແມ່ນເບິ່ງຄືວ່າ ພຣະເຈົ້າສູງສົ່ງຫຼາຍ ແລະ ບໍ່ສາມາດຢັ່ງເຖິງພຣະອົງໄດ້. ມັນເປັນຄືກັບວ່າ ພຣະເຈົ້າບໍ່ໄດ້ອາໄສໃນທ່າມກາງມະນຸດ ແລະ ຄືກັບວ່າ ພຣະອົງດູຖູກຜູ້ຄົນຍ້ອນພຣະອົງສູງສົ່ງຫຼາຍ. ຢ່າງໃດກໍຕາມ, ພຣະເຈົ້າທຳລາຍແນວຄິດຂອງຜູ້ຄົນ ແລະ ກຳຈັດມັນທັງໝົດ, ຝັງມັນໄວ້ໃນ "ຂຸມຝັງສົບ" ເຊິ່ງເປັນບ່ອນທີ່ພວກມັນຈະກາຍເປັນຂີ້ເທົ່າ. ທັດສະນະຄະຕິຂອງພຣະເຈົ້າທີ່ມີຕໍ່ແນວຄິດຂອງມະນຸດແມ່ນຄ້າຍຄືກັບທັດສະນະຄະຕິຂອງພຣະອົງທີ່ມີຕໍ່ຄົນຕາຍເຊິ່ງກຳນົດພວກເຂົາຢ່າງຕາມໃຈ. ເບິ່ງຄືວ່າ "ແນວຄິດ" ບໍ່ມີປະຕິກິລິຍາ; ດັ່ງນັ້ນ, ພຣະເຈົ້າຈຶ່ງໄດ້ປະຕິບັດພາລະກິດນີ້ນັບແຕ່ການສ້າງໂລກຈົນຮອດປັດຈຸບັນ ແລະ ບໍ່ເຄີຍໄດ້ຢຸດຢັ້ງ. ຍ້ອນເນື້ອໜັງມະນຸດຈຶ່ງຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ຍ້ອນການກະທຳຂອງຊາຕານຢູ່ເທິງແຜ່ນດິນໂລກມະນຸດຈຶ່ງມີແນວຄິດທຸກຮູບແບບໃນຊ່ວງເວລາປະສົບການຂອງພວກເຂົາ. ນີ້ເອີ້ນວ່າ "ການສ້າງໂດຍທຳມະຊາດ". ນີ້ແມ່ນຂັ້ນຕອນສຸດທ້າຍຂອງພາລະກິດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ເຊິ່ງດ້ວຍເຫດນັ້ນ ວິທີການຂອງພາລະກິດຂອງພຣະອົງຈຶ່ງໄດ້ຮອດຈຸດສູງສຸດ ແລະ ພຣະອົງກໍເພີ່ມທະວີການຝຶກຝົນຂອງພຣະອົງຕໍ່ຜູ້ຄົນ ເພື່ອວ່າພວກເຂົາຈະສາມາດຖືກເຮັດໃຫ້ສົມບູນໃນພາລະກິດສຸດທ້າຍຂອງພຣະອົງ ເຊິ່ງໃນທີ່ສຸດແລ້ວ ກໍເປັນການຕອບສະໜອງຄວາມປະສົງຂອງພຣະເຈົ້າ. ກ່ອນໜ້ານັ້ນແມ່ນມີພຽງແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດໃນທ່າມກາງມະນຸດເທົ່ານັ້ນແຕ່ບໍ່ມີພຣະທຳທີ່ກ່າວໂດຍພຣະເຈົ້າເອງ. ເມື່ອພຣະເຈົ້າກ່າວດ້ວຍສຽງຂອງພຣະອົງເອງ ທຸກຄົນກໍຕົກໃຈ ແລະ ພຣະທຳໃນປັດຈຸບັນກໍຍິ່ງເປັນປິດສະໜາຫຼາຍຂຶ້ນ. ຄວາມໝາຍຂອງພຣະທຳເຫຼົ່ານັ້ນແມ່ນຍິ່ງຍາກທີ່ຈະຢັ່ງເຖິງ ແລະ ເບິ່ງຄືວ່າ ມະນຸດມີຄວາມສັບສົນ ເນື່ອງຈາກວ່າ ຫ້າສິບເປີເຊັນຂອງພຣະທຳຂອງພຣະອົງແມ່ນຢູ່ໃນເຄື່ອງໝາຍວົງຢືມ. "ເວລາທີ່ເຮົາກ່າວ ຜູ້ຄົນຈະຟັງສຽງຂອງເຮົາດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງອົກຕັ້ງໃຈ; ແຕ່ເມື່ອເຮົາງຽບ ພວກເຂົາກໍເລີ່ມ 'ກິດຈະການ' ຂອງພວກເຂົາອີກຄັ້ງ". ວັກນັ້ນມີພຣະທຳຢູ່ໃນເຄື່ອງໝາຍວົງຢືມ. ຍິ່ງພຣະເຈົ້າກ່າວດ້ວຍຄວາມຕະຫຼົກຫຼາຍສໍ່າໃດດັ່ງທີ່ພຣະອົງໄດ້ເຮັດຢູ່ໃນນີ້ ພຣະທຳເຫຼົ່ານັ້ນກໍຍິ່ງສາມາດດຶງດູດຜູ້ຄົນໃຫ້ອ່ານພຣະທຳຫຼາຍສໍ່ານັ້ນ. ຜູ້ຄົນແມ່ນສາມາດຍອມໃຫ້ຖືກຈັດການໃນເວລາທີ່ພວກເຂົາສະບາຍໃຈ. ແຕ່ຫຼັກໆແລ້ວ ນີ້ແມ່ນເພື່ອປ້ອງກັນຫຼາຍຄົນບໍ່ໃຫ້ໝົດກຳລັງໃຈ ຫຼື ຜິດຫວັງເມື່ອພວກເຂົາບໍ່ເຂົ້າໃຈພຣະທຳຂອງພຣະເຈົ້າ. ນີ້ແມ່ນກົນລະຍຸດໃນສົງຄາມຂອງພຣະເຈົ້າຕໍ່ຊາຕານ. ດ້ວຍວິທີນີ້ເທົ່ານັ້ນ ຜູ້ຄົນຈຶ່ງຍັງຈະມີຄວາມສົນໃຈຕໍ່ພຣະທຳຂອງພຣະເຈົ້າ ແລະ ສືບຕໍ່ໃຫ້ຄວາມສົນໃຈຕໍ່ພຣະທຳເຫຼົ່ານັ້ນ ແມ່ນແຕ່ໃນເວລາທີ່ພວກເຂົາບໍ່ສາມາດເຮັດຕາມທາງຂອງພວກເຂົາ. ຢ່າງໃດກໍຕາມ, ພຣະທຳທັງໝົດຂອງພຣະອົງແມ່ນມີສະເໜ່ຫຼາຍເຊັ່ນກັນ ທີ່ບໍ່ໄດ້ຖືກອ້ອມໄປດ້ວຍເຄື່ອງໝາຍວົງຢືມ ແລະ ດ້ວຍເຫດນັ້ນ ຈຶ່ງສາມາດສັງເກດເຫັນພຣະທຳເຫຼົ່ານັ້ນຫຼາຍຂຶ້ນ ແລະ ເຮັດໃຫ້ຜູ້ຄົນຮັກພຣະທຳຂອງພຣະເຈົ້າຫຼາຍຂຶ້ນ ແລະ ຮູ້ສຶກເຖິງຄວາມຫວານຂອງພຣະທຳຂອງພຣະເຈົ້າໃນຫົວໃຈຂອງພວກເຂົາເອງ. ໃນຂະນະທີ່ພຣະທຳຂອງພຣະເຈົ້າ

ມາໃນຫຼາກຫຼາຍຮູບແບບ ແລະ ອຸດົມສົມບູນ ແລະ ແຕກຕ່າງກັນ ແລະ ຍ້ອນບໍ່ມີຄຳນາມທີ່ຊ້ຳກັນໃນທ່າມກາງພຣະທຳທັງຫຼາຍຂອງພຣະເຈົ້າ, ໃນຄວາມສຳຜັດທີສາມຂອງພວກເຂົາ ຜູ້ຄົນແມ່ນເຊື່ອວ່າພຣະເຈົ້າໃໝ່ຕະຫຼອດ ແລະ ບໍ່ເຄີຍເກົ່າ. ຍົກຕົວຢ່າງ: "ເຮົາບໍ່ໄດ້ຂໍໃຫ້ຜູ້ຄົນເປັນພຽງ 'ຜູ້ບໍລິໂພກ'; ເຮົາຂໍໃຫ້ພວກເຂົາເປັນ 'ຜູ້ຜະລິດ' ທີ່ເອົາຊະນະຊາຕານເຊັ່ນກັນ". ພຣະທຳທີ່ວ່າ "ຜູ້ບໍລິໂພກ" ແລະ "ຜູ້ຜະລິດ" ໃນປະໂຫຍກນັ້ນແມ່ນມີຄວາມໝາຍທີ່ຄ້າຍຄືກັບບາງພຣະທຳທີ່ໄດ້ກ່າວກ່ອນໜ້ານັ້ນ ແຕ່ພຣະເຈົ້າບໍ່ໄດ້ຕາຍຕົວ; ກົງກັນຂ້າມ, ພຣະອົງເຮັດໃຫ້ຜູ້ຄົນຮູ້ເຖິງຄວາມສົດໃສຂອງພຣະອົງ ແລະ ດ້ວຍເຫດນັ້ນ ກໍເຫັນຄຸນຄ່າເຖິງຄວາມຮັກຂອງພຣະເຈົ້າ. ການຕະຫຼົກໃນຄຳກ່າວຂອງພຣະເຈົ້າປະກອບມີການພິພາກສາຂອງພຣະອົງ ແລະ ຄວາມຮຽກຮ້ອງຂອງພຣະອົງທີ່ມີຕໍ່ມະນຸດ. ຍ້ອນພຣະທຳຂອງພຣະເຈົ້າລ້ວນແລ້ວແຕ່ມີວັດຖຸປະສົງ ແລະ ຍ້ອນພຣະທຳເຫຼົ່ານັ້ນລ້ວນແລ້ວແຕ່ມີຄວາມໝາຍ, ຄວາມຕະຫຼົກຂອງພຣະອົງບໍ່ພຽງແຕ່ມີເຈດຕະນາເຮັດໃຫ້ບັນຍາກາດດີຂຶ້ນ ຫຼື ເຮັດໃຫ້ຜູ້ຄົນຫົວສຽງດັງກ້ອງ ຫຼື ພຽງເຈດຕະນາເຮັດໃຫ້ກ້າມຊີ້ນພວກເຂົາຜ່ອນຄາຍ. ກົງກັນຂ້າມ, ຄວາມຕະຫຼົກຂອງພຣະເຈົ້າແມ່ນມີເຈດຕະນາເຮັດໃຫ້ມະນຸດເປັນອິດສະຫຼະຈາກຄວາມເປັນທາດຫ້າພັນປີ ໂດຍຈະບໍ່ມີວັນຖືກຜູກມັດອີກຕໍ່ໄປ ເພື່ອວ່າພວກເຂົາຈະສາມາດຍອມຮັບເອົາພຣະທຳຂອງພຣະເຈົ້າໄດ້ດີຂຶ້ນ. ວິທີການຂອງພຣະເຈົ້າແມ່ນການໃຊ້ນ້ຳຕານເຕັມບ່ວງ ເພື່ອຊ່ວຍໃຫ້ຢາເລື່ອນໄຫຼລົງຄໍໄດ້; ພຣະອົງບໍ່ໄດ້ບັງຄັບຍັດຢາຂົມລົງຄໍຜູ້ຄົນ. ມັນມີຄວາມຂົມພາຍໃນຄວາມຫວານ ແລະ ມີຄວາມຫວານພາຍໃນຄວາມຂົມເຊັ່ນກັນ.

"ເມື່ອແສງສະຫວ່າງຄ່ອຍໆເລີ່ມປາກົດຂຶ້ນໃນທິດຕາເວັນອອກ, ທຸກຄົນພາຍໃນຈັກກະວານຈະໃຫ້ຄວາມສົນໃຈຕໍ່ແສງສະຫວ່າງນັ້ນຫຼາຍຂຶ້ນ. ເມື່ອນອນບໍ່ຫຼັບ, ມະນຸດກໍອອກໄປສັງເກດແຫຼ່ງກຳເນີດຂອງແສງສະຫວ່າງຈາກທິດຕາເວັນອອກນີ້. ເນື່ອງຈາກຄວາມສາມາດທີ່ຈຳກັດຂອງພວກເຂົາ ຈຶ່ງບໍ່ມີຜູ້ໃດສາມາດເຫັນແຫຼ່ງທີ່ມາຂອງແສງສະຫວ່າງນັ້ນໄດ້". ສິ່ງນີ້ກຳລັງເກີດຂຶ້ນຢູ່ທຸກບ່ອນໃນຈັກກະວານໂດຍບໍ່ແມ່ນແຕ່ໃນທ່າມກາງລູກຊາຍຂອງພຣະເຈົ້າ ແລະ ປະຊາຊົນຂອງພຣະອົງເທົ່ານັ້ນ. ຜູ້ຄົນໃນແວດວົງສາສະໜາ ແລະ ຜູ້ທີ່ບໍ່ເຊື່ອລ້ວນແລ້ວແຕ່ມີປະຕິກິລິຍານີ້. ໃນຊ່ວງເວລາທີ່ແສງສະຫວ່າງຂອງພຣະເຈົ້າສ່ອງແສງອອກ, ຫົວໃຈທັງໝົດຂອງພວກເຂົາແມ່ນປ່ຽນແປງເທື່ອລະໜ້ອຍ ແລະ ພວກເຂົາເລີ່ມຄົ້ນພົບໂດຍບໍ່ໄດ້ເຈດຕະນາວ່າ ຊີວິດຂອງພວກເຂົາແມ່ນບໍ່ມີຄວາມໝາຍ ແລະ ຊີວິດຂອງມະນຸດແມ່ນບໍ່ມີຄ່າ. ມະນຸດບໍ່ສະແຫວງຫາອະນາຄົດ, ບໍ່ພິຈາລະນາເຖິງມື້ອື່ນ ຫຼື ບໍ່ຫ່ວງມື້ອື່ນ; ກົງກັນຂ້າມພວກເຂົາຍຶດຖືແນວຄວາມຄິດທີ່ວ່າ ພວກເຂົາຄວນກິນ ແລະ ດື່ມໃຫ້ຫຼາຍຂຶ້ນໃນຂະນະທີ່ພວກເຂົາຍັງ "ໜຸ່ມນ້ອຍ" ແລະ ທຸກຢ່າງຈະຄຸ້ມຄ່າເມື່ອຍຸກສຸດທ້າຍມາເຖິງ. ມະນຸດບໍ່ມີຄວາມປາຖະໜາໃດໆໃນການປົກຄອງໂລກ. ພະລັງຂອງຄວາມຮັກຂອງມະນຸດທີ່ມີຕໍ່ໂລກແມ່ນຖືກ "ຜີສາດຮ້າຍ" ລັກເອົາໄປໝົດແລ້ວ ແຕ່ບໍ່ມີຜູ້ໃດຮູ້ວ່າ ຕົ້ນຕໍແມ່ນຫຍັງ. ສິ່ງດຽວທີ່ພວກເຂົາສາມາດເຮັດໄດ້ແມ່ນແລ່ນໄປມາ ແລະ ແຈ້ງເຕືອນກັນ ແລະ ກັນ ເນື່ອງຈາກວ່າ ມື້ຂອງພຣະເຈົ້າຍັງບໍ່ໄດ້ມາເຖິງເທື່ອ. ໃນມື້ໜຶ່ງ ທຸກຄົນຈະເຫັນຄຳຕອບຕໍ່ຄວາມລຶກລັບທັງໝົດທີ່ບໍ່ສາມາດຢັ່ງເຖິງໄດ້. ນີ້ແມ່ນສິ່ງທີ່ພຣະເຈົ້າໝາຍເຖິງຢ່າງ

ແທ້ຈິງເມື່ອພຣະອົງກ່າວວ່າ: "ມະນຸດຕື່ນຈາກການນອນຫຼັບ ແລະ ຄວາມຝັນ ແລະ ພຽງເມື່ອນັ້ນ ພວກເຂົາຈຶ່ງຮູ້ວ່າ ມື້ຂອງເຮົາໄດ້ມາຮອດພວກເຂົາເທື່ອລະໜ້ອຍແລ້ວ". ເມື່ອເວລານັ້ນມາເຖິງ, ທຸກຄົນທີ່ເປັນຄົນຂອງພຣະເຈົ້າຈະເປັນຄືໃບໄມ້ສີຂຽວ "ທີ່ລໍຖ້າຫຼົ້ນບົດບາດຂອງຕົວເອງເພື່ອເຮົາ ໃນຂະນະທີ່ເຮົາຢູ່ແຜ່ນດິນໂລກ". ມີຫຼາຍຄົນໃນທ່າມກາງປະຊາຊົນຂອງພຣະເຈົ້າໃນປະເທດຈີນທີ່ຍັງຢູ່ໃນສະພາບເດີມພາຍຫຼັງທີ່ພຣະເຈົ້າເປັ່ງສຽງຂອງພຣະອົງ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງກ່າວວ່າ: "ແຕ່ບໍ່ມີພະລັງທີ່ຈະປ່ຽນແປງຄວາມຈິງ, ບໍ່ສາມາດເຮັດຫຍັງໄດ້ ນອກຈາກຖ້າໃຫ້ເຮົາປະກາດການຕັດສິນ". ຍັງຈະມີບາງຄົນໃນທ່າມກາງພວກເຂົາທີ່ຈະຖືກກຳຈັດ. ບໍ່ແມ່ນທຸກຄົນທີ່ຈະບໍ່ໄດ້ປ່ຽນແປງ. ກົງກັນຂ້າມ, ຜູ້ຄົນສາມາດເຮັດຕາມມາດຕະຖານຫຼັງຈາກຖືກທົດສອບເທົ່ານັ້ນ ເຊິ່ງຈະມີການອອກ "ໃບຢັ້ງຢືນຄຸນນະພາບ" ໃຫ້ແກ່ພວກເຂົາ; ບໍ່ສະນັ້ນ, ພວກເຂົາຈະກາຍເປັນຂີ້ເຫຍື້ອຢູ່ກອງຂີ້ເຫຍື້ອ. ພຣະເຈົ້າຊີ້ໃຫ້ເຫັນເປັນປະຈຳເຖິງສະພາບທີ່ແທ້ຈິງຂອງມະນຸດ ເພື່ອຜູ້ຄົນຈະຮູ້ສຶກເຖິງຄວາມລຶກລັບຂອງພຣະເຈົ້າຫຼາຍຂຶ້ນ. "ຖ້າພຣະອົງບໍ່ແມ່ນພຣະເຈົ້າ ແລ້ວພຣະອົງຈະສາມາດຮູ້ຈັກສະພາບທີ່ແທ້ຈິງຂອງພວກເຮົາເປັນຢ່າງດີໄດ້ບໍ?" ຢ່າງໃດກໍຕາມ, ຍ້ອນຄວາມອ່ອນແອຂອງຜູ້ຄົນ "ໃນໃຈຂອງມະນຸດເຮົາຈຶ່ງບໍ່ໄດ້ສູງສົ່ງ ຫຼື ຕໍ່າຕ້ອຍ. ສຳລັບພວກເຂົາແລ້ວ ມັນບໍ່ໄດ້ມີຫຍັງແຕກຕ່າງ ຖ້າເຮົາມີຕົວຕົນ ຫຼື ບໍ່ມີກໍຕາມ". ນີ້ບໍ່ແມ່ນສະພາບຂອງທຸກຄົນທີ່ເໝາະສົມທີ່ສຸດກັບຄວາມເປັນຈິງຢ່າງແທ້ຈິງບໍ? ສຳລັບມະນຸດແລ້ວ ພຣະເຈົ້າແມ່ນມີຕົວຕົນເມື່ອພວກເຂົາສະແຫວງຫາພຣະອົງ ແລະ ບໍ່ມີຕົວຕົນເມື່ອພວກເຂົາບໍ່ໄດ້ສະແຫວງຫາພຣະອົງ. ເວົ້າອີກຢ່າງໜຶ່ງກໍຄື ພຣະເຈົ້າມີຕົວຕົນຢູ່ໃນຫົວໃຈຂອງມະນຸດທັນທີທີ່ພວກເຂົາຕ້ອງການຄວາມຊ່ວຍເຫຼືອ ແຕ່ເມື່ອພວກເຂົາບໍ່ໄດ້ຕ້ອງການພຣະອົງອີກຕໍ່ໄປ ພຣະອົງກໍບໍ່ມີຕົວຕົນອີກຕໍ່ໄປ. ນີ້ແມ່ນສິ່ງທີ່ຢູ່ພາຍໃນຫົວໃຈຂອງຜູ້ຄົນ. ໃນຄວາມເປັນຈິງແລ້ວ ທຸກຄົນທີ່ຢູ່ແຜ່ນດິນໂລກຄິດແບບນີ້ ລວມເຖິງ "ຜູ້ທີ່ບໍ່ເຊື່ອວ່າມີພຣະເຈົ້າ" ແລະ "ຄວາມຮູ້ສຶກ" ຂອງພວກເຂົາກ່ຽວກັບພຣະເຈົ້າກໍຍັງເລື່ອນລອຍ ແລະ ມືດມົວອີກດ້ວຍ.

"ສະນັ້ນ, ພູເຂົາຈຶ່ງກາຍເປັນຊາຍແດນລະຫວ່າງປະເທດຕ່າງໆຢູ່ແຜ່ນດິນໂລກ, ນໍ້າກາຍເປັນຮົ້ວກັ້ນເພື່ອແຍກປະຊາຊົນຂອງດິນແດນຕ່າງໆອອກຈາກກັນ ແລະ ອາກາດກາຍເປັນສິ່ງທີ່ໄຫຼຈາກຄົນໜຶ່ງສູ່ຄົນໜຶ່ງໃນອາວະກາດຢູ່ເທິງແຜ່ນດິນໂລກ". ນີ້ແມ່ນພາລະກິດທີ່ພຣະເຈົ້າປະຕິບັດໃນຕອນສ້າງໂລກ. ການກ່າວສິ່ງນີ້ຢູ່ໃນນີ້ເຮັດໃຫ້ຜູ້ຄົນສັບສົນ: ເປັນໄປໄດ້ບໍວ່າ ພຣະເຈົ້າຕ້ອງການສ້າງໂລກອື່ນ? ມັນຍຸຕິທຳແລ້ວທີ່ຈະກ່າວສິ່ງນີ້: ທຸກຄັ້ງທີ່ພຣະເຈົ້າກ່າວ ພຣະທຳຂອງພຣະອົງປະກອບດ້ວຍການຊົງສ້າງ, ການຄຸ້ມຄອງ ແລະ ການທຳລາຍໂລກ; ມັນເປັນພຽງແຕ່ວ່າ ບາງຄັ້ງສິ່ງເຫຼົ່ານັ້ນແມ່ນມີຄວາມຊັດເຈນ ແລະ ບາງຄັ້ງສິ່ງເຫຼົ່ານັ້ນກໍເລື່ອນລອຍ. ການຄຸ້ມຄອງທັງໝົດຂອງພຣະເຈົ້າແມ່ນສະແດງອອກຢູ່ໃນພຣະທຳຂອງພຣະອົງ; ມັນເປັນພຽງແຕ່ວ່າ ຜູ້ຄົນບໍ່ສາມາດຈຳແນກສິ່ງເຫຼົ່ານັ້ນໄດ້ເທົ່ານັ້ນ. ພອນທີ່ພຣະເຈົ້າໄດ້ປະທານໃຫ້ແກ່ມະນຸດເຮັດໃຫ້ຄວາມເຊື່ອຂອງພວກເຂົາເພີ່ມຂຶ້ນຫຼາຍຮ້ອຍເທົ່າ. ຈາກພາຍນອກ, ເບິ່ງຄືກັບວ່າ ພຣະເຈົ້າກຳລັງເຮັດສັນຍາກັບພວກເຂົາ ແຕ່ໃນແກ່ນແທ້ແລ້ວ ມັນແມ່ນມາດຕະການທີ່ພຣະເຈົ້າຮຽກຮ້ອງຈາກປະຊາຊົນຂອງອານາຈັກຂອງພຣະອົງ. ຜູ້ທີ່ມີຄວາມເໝາະສົມ

ໃນການຮັບໃຊ້ຈະຄົງຢູ່ ໃນຂະນະທີ່ຜູ້ທີ່ບໍ່ເໝາະສົມຈະຖືກກືນກິນດ້ວຍໄພພິບັດທີ່ຕົກລົງມາຈາກສະຫວັນ. "ສຽງຟ້າຮ້ອງດັງກຶກກ້ອງໄປທົ່ວທ້ອງຟ້າຈະໂຈມຕີມະນຸດໃຫ້ລົ້ມລົງ; ໃນຂະນະທີ່ພວກເຂົາລົ້ມລົງ ພູເຂົາສູງກໍຈະຝັງພວກເຂົາ; ສັດຮ້າຍທີ່ຫິວໂຫຍຈະກິນພວກເຂົາ; ແລະ ມະຫາສະໝຸດຍິ່ງຂຶ້ນຈະຖ້ວມຫົວພວກເຂົາ. ໃນຂະນະທີ່ມະນຸດມີຂໍ້ຂັດແຍ້ງເຊິ່ງກັນແລະກັນ, ມະນຸດທຸກຄົນຈະສະແຫວງຫາຄວາມພິນາດຂອງພວກເຂົາເອງໃນໄພພິບັດທີ່ເກີດຂຶ້ນຈາກພວກເຂົາ". ນີ້ແມ່ນ "ການປະຕິບັດທີ່ພິເສດ" ທີ່ຈະຈັດໃຫ້ຜູ້ທີ່ບໍ່ໄດ້ມາດຕະຖານ ແລະ ຜູ້ທີ່ ໃນທີ່ສຸດ ຈະບໍ່ໄດ້ຮັບຄວາມລອດພົ້ນໃນອານາຈັກຂອງພຣະເຈົ້າ. ຍິ່ງພຣະເຈົ້າກ່າວສິ່ງຕ່າງໆຫຼາຍຂຶ້ນເຊັ່ນ: "ພາຍໃຕ້ແສງສະຫວ່າງແຫ່ງການນໍາທາງຂອງເຮົາ ພວກເຈົ້າຈະສາມາດຜ່ານພົ້ນຈາກກໍາມືຂອງອໍານາດແຫ່ງຄວາມມືດໄປໄດ້ຢ່າງແນ່ນອນ. ພວກເຈົ້າຈະບໍ່ສູນເສຍແສງສະຫວ່າງແຫ່ງການນໍາທາງໃນທ່າມກາງຄວາມມືດຢ່າງແນ່ນອນ", ຜູ້ຄົນກໍຍິ່ງຮູ້ກ່ຽວກັບຄວາມເປັນຕາເຄົາລົບນັບຖືຂອງພວກເຂົາຫຼາຍຂຶ້ນ; ສະນັ້ນ, ພວກເຂົາຈຶ່ງມີຄວາມເຊື່ອໃນການສະແຫວງຫາຊີວິດໃໝ່. ພຣະເຈົ້າສະໜອງໃຫ້ມະນຸດໃນຂະນະທີ່ພວກເຂົາຂໍຈາກພຣະອົງ. ເມື່ອພຣະເຈົ້າໄດ້ເປີດໂປງພວກເຂົາໃນລະດັບໃດໜຶ່ງ, ພຣະອົງກໍປ່ຽນແປງວິທີການກ່າວຂອງພຣະອົງ ໂດຍໃຊ້ນໍ້າສຽງຂອງການໃຫ້ພອນເພື່ອໄດ້ຮັບຜົນທີ່ດີທີ່ສຸດ. ການຮຽກຮ້ອງຕໍ່ມະນຸດດ້ວຍວິທີນີ້ເຮັດໃຫ້ໄດ້ຮັບຜົນທາງພາກປະຕິບັດຫຼາຍຂຶ້ນ. ຍ້ອນທຸກຄົນເຕັມໃຈທີ່ຈະເວົ້າທຸລະກິດກັບຜູ້ຮ່ວມເຮັດທຸລະກິດຂອງພວກເຂົາ. ພວກເຂົາທຸກຄົນແມ່ນຊ່ຽວຊານດ້ານທຸລະກິດ. ນີ້ແມ່ນສິ່ງທີ່ພຣະເຈົ້າສຸມໃສ່ຢ່າງແທ້ຈິງໃນການກ່າວສິ່ງນີ້. ສະນັ້ນ ແຜ່ນດິນ "ຊີນິມ" ແມ່ນຫຍັງ? ໃນນີ້ ພຣະເຈົ້າບໍ່ໄດ້ໝາຍເຖິງອານາຈັກຢູ່ເທິງແຜ່ນດິນໂລກ ເຊິ່ງຖືກຊາຕານເຮັດໃຫ້ເສື່ອມຊາມ ແຕ່ກົງກັນຂ້າມແມ່ນໝາຍເຖິງການຊຸມນຸມແຫ່ງທູດສະຫວັນທັງໝົດທີ່ມາຈາກພຣະເຈົ້າ. ພຣະທໍາທີ່ວ່າ: "ຍຶດໝັ້ນ ແລະ ບໍ່ສັ່ນຄອນ" ມີຄວາມໝາຍວ່າ ທູດສະຫວັນຈະທະລຸຜ່ານກອງກໍາລັງທັງໝົດຂອງຊາຕານ, ດ້ວຍເຫດນັ້ນ ກໍຈະສ້າງແຜ່ນດິນຊີນິມທົ່ວຈັກກະວານທັງໝົດ. ສະນັ້ນ, ຄວາມໝາຍທີ່ແທ້ຈິງຂອງແຜ່ນດິນຊີນິມແມ່ນການເຕົ້າໂຮມທູດສະຫວັນທັງໝົດຢູ່ເທິງແຜ່ນດິນໂລກ ແລະ ໃນນີ້ ມັນໝາຍເຖິງຜູ້ທີ່ຢູ່ເທິງແຜ່ນດິນໂລກ. ດັ່ງນັ້ນ, ອານາຈັກທີ່ຈະມີຢູ່ເທິງແຜ່ນດິນໂລກ ສຸດທ້າຍ ຈະຖືກເອີ້ນວ່າແຜ່ນດິນ "ຊີນິມ" ແລະ ບໍ່ແມ່ນ "ອານາຈັກ". ບໍ່ມີຄວາມໝາຍທີ່ແທ້ຈິງຂອງ "ອານາຈັກ" ຢູ່ເທິງແຜ່ນດິນໂລກ; ໃນແກ່ນແທ້ແລ້ວ ມັນແມ່ນແຜ່ນດິນຊີນິມ. ສະນັ້ນ, ພຽງເມື່ອເຊື່ອມໂຍງສິ່ງເຫຼົ່ານັ້ນກັບຄໍານິຍາມຂອງຊີນິມເທົ່ານັ້ນ ຄົນໃດໜຶ່ງຈຶ່ງຈະຮູ້ຈັກຄວາມໝາຍທີ່ແທ້ຈິງຂອງພຣະທໍາທີ່ວ່າ: "ເຈົ້າຈະສົ່ງແສງລັດສະໝີຂອງເຮົາໄປທົ່ວຈັກກະວານທັງໝົດຢ່າງແນ່ນອນ". ສິ່ງນີ້ສະແດງໃຫ້ເຫັນເຖິງຕໍາແໜ່ງຂອງທຸກຄົນຢູ່ເທິງແຜ່ນດິນໂລກໃນອະນາຄົດ. ປະຊາຊົນທຸກຄົນຂອງແຜ່ນດິນຊີນິມຈະເປັນກະສັດທີ່ປົກຄອງທຸກຄົນຢູ່ແຜ່ນດິນໂລກຫຼັງຈາກທີ່ພວກເຂົາໄດ້ທົນທຸກຕໍ່ການຂ້ຽນຕີ. ທຸກຢ່າງຢູ່ແຜ່ນດິນໂລກຈະດໍາເນີນຢ່າງປົກກະຕິຍ້ອນການຄຸ້ມຄອງຂອງປະຊາຊົນແຫ່ງແຜ່ນດິນຊີນິມ. ນີ້ເປັນພຽງຮູບຮ່າງບາງສ່ວນຂອງສະຖານະການ. ມະນຸດທຸກຄົນຈະຄົງຢູ່ພາຍໃນອານາຈັກຂອງພຣະເຈົ້າ ເຊິ່ງໝາຍຄວາມວ່າ ພວກເຂົາຈະຖືກປະໄວ້ໃນແຜ່ນດິນຊີນິມ. ມະນຸດຢູ່ແຜ່ນດິນໂລກຈະສາມາດສື່ສານກັບທູດສະຫວັນ. ດ້ວຍເຫດນັ້ນ,

ສະຫວັນ ແລະ ແຜ່ນດິນໂລກຈະຖືກເຮັດໃຫ້ເຊື່ອມຕໍ່ກັນ; ຫຼື ເວົ້າອີກຢ່າງໜຶ່ງກໍຄື ທຸກຄົນຢູ່ເທິງແຜ່ນດິນໂລກຈະອ່ອນນ້ອມຕໍ່ພຣະເຈົ້າ ແລະ ຮັກພຣະເຈົ້າດັ່ງທີ່ທູດສະຫວັນປະຕິບັດກັນຢູ່ສະຫວັນ. ໃນເວລານັ້ນ ພຣະເຈົ້າຈະປາກົດຕໍ່ທຸກຄົນຢູ່ເທິງແຜ່ນດິນໂລກຢ່າງເປີດເຜີຍ ແລະ ອະນຸຍາດໃຫ້ພວກເຂົາເຫັນໃບໜ້າທີ່ແທ້ຈິງຂອງພຣະອົງດ້ວຍຕາເປົ່າ ແລະ ພຣະອົງຈະເປີດເຜີຍຕົວເອງຕໍ່ພວກເຂົາໃນເວລາໃດກໍໄດ້.

# ບົດທີ 20

ພຣະເຈົ້າສ້າງມະນຸດຊາດທັງປວງ ແລະ ໄດ້ນໍາພາມະນຸດຊາດຈົນເຖິງປັດຈຸບັນ. ສະນັ້ນ ພຣະເຈົ້າຈຶ່ງຮູ້ຈັກທຸກສິ່ງທີ່ເກີດຂຶ້ນທ່າມກາງມະນຸດ: ພຣະອົງຮູ້ຈັກເຖິງຄວາມຂົມຂື່ນໃນໂລກຂອງມະນຸດ, ເຂົ້າໃຈຄວາມຫວານຊື່ນໃນໂລກຂອງມະນຸດ ແລະ ສະນັ້ນ ໃນແຕ່ລະມື້ ພຣະອົງຈຶ່ງອະທິບາຍສະພາບຊີວິດຂອງມະນຸດຊາດທັງປວງ ແລະ ຍິ່ງໄປກວ່ານັ້ນ ພຣະອົງຈັດການກັບຄວາມອ່ອນແອ ແລະ ຄວາມເສື່ອມຊາມຂອງມະນຸດຊາດທັງປວງ. ມັນບໍ່ແມ່ນຄວາມປະສົງຂອງພຣະເຈົ້າທີ່ຈະໃຫ້ມະນຸດຊາດທັງປວງຖືກໂຍນຖິ້ມລົງສູ່ເຫວເລິກທີ່ຢັ່ງບໍ່ເຖິງ ຫຼື ທີ່ຈະໃຫ້ມະນຸດຊາດທັງໝົດຖືກຊ່ວຍໃຫ້ລອດພົ້ນ. ມີຫຼັກການໃນການກະທໍາຂອງພຣະເຈົ້າຢູ່ສະເໝີ, ແຕ່ບໍ່ມີໃຜສາມາດເຂົ້າໃຈກົດເກນຂອງທຸກສິ່ງທີ່ພຣະອົງເຮັດໄດ້. ເມື່ອຜູ້ຄົນຮູ້ຈັກເຖິງຄວາມສະຫງ່າຜ່າເຜີຍ ແລະ ຄວາມໂກດຮ້າຍຂອງພຣະເຈົ້າ, ພຣະເຈົ້າກໍປ່ຽນແປງນໍ້າສຽງໃຫ້ກາຍເປັນຄວາມເມດຕາ ແລະ ຄວາມຮັກທັນທີ, ແຕ່ເມື່ອຜູ້ຄົນມາຮູ້ຈັກຄວາມເມດຕາ ແລະ ຄວາມຮັກຂອງພຣະເຈົ້າ, ທັນທີພຣະອົງກໍປ່ຽນນໍ້າສຽງອີກຄັ້ງ ໂດຍເຮັດໃຫ້ພຣະທໍາຂອງພຣະອົງກືນຍາກ ຄືກັບວ່າພຣະທໍາເຫຼົ່ານັ້ນເປັນໄກ່ດິບ. ໃນບັນດາພຣະທໍາທັງໝົດຂອງພຣະເຈົ້າ, ການເລີ່ມຕົ້ນບໍ່ເຄີຍຊໍ້າໄປມາ ແລະ ພຣະທໍາຂໍ້ໃດຂໍ້ໜຶ່ງຂອງພຣະອົງກໍບໍ່ເຄີຍຖືກກ່າວຕາມຫຼັກການຂອງຖ້ອຍຄໍາທີ່ຢູ່ໃນມື້ວານ; ແມ່ນແຕ່ນໍ້າສຽງກໍບໍ່ຄືກັນ ແລະ ບໍ່ມີເນື້ອຫາເຊື່ອມໂຍງກັນເລີຍ, ທຸກສິ່ງເຫຼົ່ານີ້ຍິ່ງເຮັດໃຫ້ຜູ້ຄົນຮູ້ສຶກສັບສົນຫຼາຍຂຶ້ນ. ນີ້ຄືສະຕິປັນຍາຂອງພຣະເຈົ້າ ແລະ ການເປີດເຜີຍເຖິງອຸປະນິໄສຂອງພຣະອົງ. ພຣະອົງໃຊ້ນໍ້າສຽງ ແລະ ລັກສະນະຄໍາເວົ້າຂອງພຣະອົງເພື່ອແຍກແນວຄິດຂອງຜູ້ຄົນອອກ ເພື່ອເຮັດໃຫ້ຊາຕານສັບສົນ, ບໍ່ໃຫ້ຊາຕານມີໂອກາດໄດ້ໃສ່ຜິດໃນການກະທໍາຂອງພຣະເຈົ້າ. ຄວາມມະຫັດສະຈັນຂອງການກະທໍາຂອງພຣະເຈົ້າເຮັດໃຫ້ຄວາມຄິດຂອງຜູ້ຄົນຫວັ່ນໄຫວໂດຍພຣະທໍາຂອງພຣະເຈົ້າ. ພວກເຂົາເກືອບຈະບໍ່ສາມາດຄົ້ນພົບປະຕູທາງໜ້າຂອງພວກເຂົາເອງ ແລະ ເຖິງບໍ່ຮູ້ຈັກແມ່ນແຕ່ວ່າເມື່ອໃດພວກເຂົາຄວນກິນ ຫຼື ພັກຜ່ອນ ແລ້ວເພື່ອບັນລຸ "ການເສຍສະຫຼະການຫຼັບນອນ ແລະ ອາຫານເພື່ອພຣະເຈົ້າ" ຢ່າງແທ້ຈິງ. ແມ່ນແຕ່ໃນເວລານີ້, ພຣະເຈົ້າກໍຍັງບໍ່ພໍໃຈກັບສະຖານະການໃນປັດຈຸບັນ ແລະ ໃຈຮ້າຍກັບມະນຸດຢູ່ສະເໝີ, ບັງຄັບໃຫ້ເຂົານໍາຫົວໃຈທີ່ແທ້ຈິງຂອງເຂົາອອກມາ. ບໍ່ດັ່ງນັ້ນ ທັນທີທີ່ພຣະເຈົ້າຜ່ອນຜັນແມ່ນແຕ່ໜ້ອຍດຽວ, ຜູ້ຄົນກໍ່ຈະ "ເຊື່ອຟັງ" ທັນທີ ແລະ ເລີ່ມບໍ່ເອົາໃຈໃສ່. ນີ້ຄືຄວາມຕໍ່າຕ້ອຍຂອງມະນຸດ; ເຂົາບໍ່ສາມາດຖືກຍົວະໄດ້, ແຕ່ຕ້ອງຖືກຕີ ຫຼື ລາກເພື່ອໃຫ້ເຂົາເຄື່ອນໄຫວ. "ໃນບັນດາຄົນທີ່ເຮົາເຝົ້າເບິ່ງ, ບໍ່ມີໃຜສະແຫວງຫາເຮົາຢ່າງຕັ້ງໃຈ ແລະ ແບບກົງໄປກົງມາ. ພວກເຂົາລ້ວນແລ້ວແຕ່ມາຢູ່ຕໍ່ໜ້າເຮົາຍ້ອນການຊັກຈູງຂອງຄົນອື່ນ, ແລ່ນຕາມຄົນສ່ວນໃຫຍ່ ແລະ ພວກເຂົາບໍ່ເຕັມໃຈທີ່ຈະຈ່າຍລາຄາ ຫຼື ໃຊ້ເວລາເພື່ອເພີ່ມພູນຊີວິດຂອງພວກເຂົາ". ສິ່ງດັ່ງກ່າວຄືສະຖານະການຂອງທຸກສິ່ງທີ່ຢູ່ເທິງແຜ່ນດິນໂລກ. ສະນັ້ນ ຫາກປາສະຈາກພາລະກິດຂອງອັກຄະສາວົກ ຫຼື ຜູ້ນໍາ, ທຸກຄົນກໍຈະຖືກເຮັດໃຫ້ແຕກກະຈັກກະຈາຍແຕ່ດົນແລ້ວ ແລະ ສະນັ້ນທົ່ວຍຸກຕ່າງໆຈຶ່ງບໍ່ມີການຂາດອັກຄະສາວົກ ແລະ ຜູ້ປະກາດພຣະທໍາ.

ໃນຖ້ອຍຄຳເຫຼົ່ານີ້, ພຣະເຈົ້າໃສ່ໃຈເປັນພິເສດເພື່ອສະຫຼຸບສະພາບຊີວິດຂອງມະນຸດຊາດທັງປວງ. ພຣະທຳດັ່ງກ່າວລ້ວນແລ້ວແຕ່ຢູ່ໃນຮູບແບບນີ້: "ຊີວິດຂອງມະນຸດບໍ່ມີຄວາມອົບອຸ່ນແມ່ນແຕ່ໜ້ອຍດຽວ ແລະ ປາສະຈາກຮ່ອງຮອຍຂອງມະນຸດ ຫຼື ແສງສະຫວ່າງທັງສິ້ນ, ແຕ່ເຂົາກໍຍັງຕາມໃຈຕົວເອງ, ພວກເຂົາປ່ອຍໃຫ້ຊີວິດໝົດຄຸນຄ່າກັບການດີ້ນລົນໂດຍບໍ່ບັນລຸຫຍັງຈັກຢ່າງ. ໃນພິບຕາດຽວ, ມື້ແຫ່ງຄວາມຕາຍກໍໃກ້ເຂົ້າມາ ແລະ ມະນຸດກໍຕາຍຢ່າງຂົມຂື່ນ" ລ້ວນແລ້ວແຕ່ເປັນແບບນີ້ໝົດ. ເປັນຫຍັງພຣະເຈົ້າຈຶ່ງນຳພາການເປັນຢູ່ຂອງມະນຸດຊາດຈົນເຖິງປັດຈຸບັນ ແລະ ເປີດເຜີຍຄວາມວ່າງເປົ່າຂອງຊີວິດໃນໂລກມະນຸດເຊັ່ນກັນ? ແລ້ວເປັນຫຍັງພຣະອົງຈຶ່ງບັນລະຍາຍວ່າຊີວິດທັງໝົດຂອງທຸກຄົນຄື "ການຮີບມາ ແລະ ການຮີບໄປ"? ສາມາດເວົ້າໄດ້ວ່າ ສິ່ງນີ້ແມ່ນລ້ວນແລ້ວແຕ່ເປັນແຜນການຂອງພຣະເຈົ້າ, ມັນຖືກກຳນົດໄວ້ໂດຍພຣະເຈົ້າ, ເວົ້າອີກຢ່າງໜຶ່ງກໍຄື ມັນສະທ້ອນໃຫ້ເຫັນເຖິງວິທີທີ່ພຣະເຈົ້າກຽດຊັງທຸກສິ່ງຍົກເວັ້ນຊີວິດທີ່ຢູ່ໃນຄວາມສັກສິດ. ເຖິງແມ່ນພຣະເຈົ້າສ້າງມະນຸດຊາດທັງປວງ, ພຣະອົງກໍບໍ່ເຄີຍພໍໃຈໃນການດຳລົງຊີວິດຂອງມະນຸດຊາດທັງປວງຢ່າງແທ້ຈິງ ແລະ ດ້ວຍເຫດນັ້ນພຣະອົງພຽງແຕ່ຍອມໃຫ້ມະນຸດຊາດມີຊີວິດຢູ່ພາຍໃຕ້ຄວາມເສື່ອມຊາມຂອງຊາຕານ. ຫຼັງຈາກທີ່ມະນຸດຊາດໄດ້ຜ່ານຂະບວນການນີ້, ພຣະອົງກໍຈະທຳລາຍລ້າງ ຫຼື ຊ່ວຍມະນຸດຊາດໃຫ້ລອດພົ້ນ ແລະດ້ວຍເຫດນັ້ນ ມະນຸດກໍຈະໄດ້ຮັບຊີວິດເທິງແຜ່ນດິນໂລກທີ່ຢ່າງມີຄວາມໝາຍ. ສິ່ງນີ້ລ້ວນແລ້ວແຕ່ເປັນສ່ວນໜຶ່ງໃນແຜນການຂອງພຣະເຈົ້າ. ແລ້ວສະນັ້ນຈຶ່ງມີຄວາມປາຖະໜາໃນຈິດສຳນຶກຂອງມະນຸດຢ່າງສະເໝີ ເຊິ່ງບໍ່ໄດ້ນຳພາໃຜໄປສູ່ຄວາມຕາຍຢ່າງໄຮ້ຄວາມໝາຍ, ພຽງແຕ່ຄົນທີ່ບັນລຸຄວາມປາຖະໜານີ້ແມ່ນເປັນຄົນແຫ່ງຍຸກສຸດທ້າຍເທົ່ານັ້ນ. ໃນປັດຈຸບັນ, ຜູ້ຄົນຍັງດຳລົງຊີວິດຢູ່ທ່າມກາງຄວາມວ່າງເປົ່າທີ່ບໍ່ສາມາດກັບຄືນສູ່ສະພາບເດີມໄດ້ ແລະ ພວກເຂົາຍັງລໍຖ້າຄວາມປາຖະໜາທີ່ບໍ່ສາມາດເຫັນໄດ້: "ເມື່ອເຮົາປົກປິດໃບໜ້າຂອງເຮົາດ້ວຍມືຂອງເຮົາ ແລະ ແນບຜູ້ຄົນລົງພື້ນດິນ, ພວກເຂົາກໍຮູ້ສຶກຫັນໃຈຫອບທັນທີ ແລະ ເກືອບຈະບໍ່ສາມາດເອົາຕົວລອດໄດ້. ພວກເຂົາທຸກຄົນກໍຮ້ອງໄຫ້ຫາເຮົາ ໂດຍຢ້ານວ່າເຮົາຈະທຳລາຍພວກເຂົາ ຍ້ອນວ່າ ພວກເຂົາທຸກຄົນປາຖະໜາທີ່ຈະເຫັນມື້ທີ່ເຮົາໄດ້ຮັບສະຫງ່າລາສີ". ສິ່ງດັ່ງກ່າວແມ່ນສະຖານະການຂອງທຸກຄົນໃນປັດຈຸບັນ. ພວກເຂົາລ້ວນແລ້ວແຕ່ດຳລົງຊີວິດຢູ່ໃນ "ສູນອາກາດ" ທີ່ບໍ່ມີ "ອົກຊີແຊນ" ເຊິ່ງເຮັດໃຫ້ພວກເຂົາຫາຍໃຈຍາກ. ພຣະເຈົ້າໃຊ້ຄວາມປາຖະໜາທີ່ຢູ່ໃນຄວາມຮູ້ສຶກຂອງມະນຸດໃຫ້ສິ່ງເສີມຄວາມຢູ່ລອດຂອງມະນຸດຊາດທັງປວງ; ຖ້າບໍ່ດັ່ງນັ້ນ ທຸກຄົນກໍຈະ "ໜີອອກຈາກບ້ານເພື່ອໄປເປັນພະສົງ" ເຊິ່ງຈະສົ່ງຜົນໃຫ້ມະນຸດຊາດສູນພັນ ແລະ ເຖິງຈຸດຈົບ. ສະນັ້ນ ມັນກໍຍ້ອນສັນຍາທີ່ພຣະເຈົ້າໄດ້ມອບໃຫ້ກັບມະນຸດທີ່ເຮັດໃຫ້ມະນຸດຢູ່ລອດຈົນເຖິງປັດຈຸບັນ. ນີ້ຄືຄວາມຈິງ, ແຕ່ມະນຸດບໍ່ເຄີຍຄົ້ນພົບກົດເກນນີ້ ແລະ ສະນັ້ນ ເຂົາຈຶ່ງບໍ່ຮູ້ຈັກວ່າ ເປັນຫຍັງເຂົາຈຶ່ງ "ຢ້ານຢູ່ເລິກໆວ່າຄວາມຕາຍຈະມາເຖິງເຂົາເປັນຄັ້ງທີສອງ". ການເປັນມະນຸດ, ບໍ່ມີໃຜມີຄວາມກ້າຫານໃນການສືບຕໍ່ດຳລົງຊີວິດ, ແຕ່ກໍບໍ່ມີໃຜກ້າທີ່ຈະຕາຍ ແລະ ສະນັ້ນພຣະເຈົ້າຈຶ່ງເວົ້າວ່າຜູ້ຄົນ "ຕາຍຢ່າງຂົມຂື່ນ". ສິ່ງດັ່ງກ່າວແມ່ນສະຖານະການແທ້ຈິງທີ່ຢູ່ທ່າມກາງມະນຸດ. ບາງເທື່ອໃນຄວາມຄາດຫວັງຂອງພວກເຂົາ, ບາງຄົນໄດ້ພະເຊີນກັບຄວາມລົ້ມເຫຼວ ແລະ

ຄິດເຖິງຄວາມຕາຍ, ແຕ່ຄວາມຄິດເຫຼົ່ານີ້ບໍ່ເຄີຍບັນລຸຜົນໄດ້ຈັກເທື່ອ; ບາງເທື່ອ ບາງຄົນຄິດເຖິງຄວາມຕາຍ ຍ້ອນບັນຫາໃນຄອບຄົວ, ແຕ່ກັງວົນເຖິງຄົນທີ່ພວກເຂົາຮັກ ແລະ ພວກເຂົາຍັງບໍ່ສາມາດບັນລຸຄວາມປາຖະໜາຂອງພວກເຂົາໄດ້; ແລະ ບາງເທື່ອ ບາງຄົນກໍຄິດເຖິງຄວາມຕາຍ ຍ້ອນບັນຫາໃນຊີວິດຄູ່ຂອງພວກເຂົາ, ແຕ່ພວກເຂົາບໍ່ເຕັມໃຈຜ່ານມັນໄປ. ສະນັ້ນ ຜູ້ຄົນຈຶ່ງຕາຍພ້ອມກັບຄວາມທຸກ ຫຼື ຄວາມເສຍໃຈໃນຫົວໃຈຂອງພວກເຂົາຕະຫຼອດໄປ. ສິ່ງດັ່ງກ່າວແມ່ນສະພາວະທີ່ຫຼາກຫຼາຍຂອງທຸກຄົນ. ເມື່ອຫຼຽວເບິ່ງໂລກກວ້າງຂອງມະນຸດ, ຜູ້ຄົນມາ ແລະ ໄປຢູ່ໃນກະແສຢ່າງບໍ່ສິ້ນສຸດ ແລະ ເຖິງແມ່ນພວກເຂົາຮູ້ສຶກວ່າ ມີຄວາມສຸກໃນການຕາຍຫຼາຍກວ່າໃນການມີຊີວິດຢູ່, ພວກເຂົາກໍຍັງເວົ້າໄດ້ແຕ່ປາກ ແລະ ບໍ່ເຄີຍມີໃຜນໍາພາໂດຍເປັນຕົວຢ່າງ, ໂດຍຕາຍໄປ ແລະ ກັບຄືນມາອີກຄັ້ງ, ແລ້ວມາບອກກັບຜູ້ຄົນທີ່ມີຊີວິດຢູ່ວ່າ ການມີຄວາມສຸກກັບຄວາມຕາຍເປັນແນວໃດ. ຜູ້ຄົນແມ່ນໜ້າເວດທະນາ ແລະ ຕໍ່າຊ້າຫຼາຍ: ພວກເຂົາບໍ່ມີຢາງອາຍ ຫຼື ການເຄົາລົບຕົນເອງ ແລະ ພວກເຂົາຄືນຄໍາເວົ້າຢູ່ສະເໝີ. ໃນແຜນການຂອງພຣະອົງ, ພຣະເຈົ້າໄດ້ກໍານົດກຸ່ມຄົນທີ່ຈະໄດ້ຮັບສັນຍາຂອງພຣະອົງໄວ້ລ່ວງໜ້າແລ້ວ ແລະ ສະນັ້ນ ພຣະເຈົ້າຈຶ່ງເວົ້າວ່າ "ຫຼາຍຄົນໄດ້ດໍາລົງຊີວິດໃນເນື້ອໜັງ ແລະ ຫຼາຍຄົນໄດ້ຕາຍ ແລະ ເກີດໃໝ່ເທິງແຜ່ນດິນໂລກ. ແຕ່ບໍ່ເຄີຍມີໃຜທີ່ໄດ້ມີໂອກາດຮັບເອົາພອນແຫ່ງອານາຈັກໃນປັດຈຸບັນ". ທຸກຄົນທີ່ໄດ້ຮັບພອນແຫ່ງອານາຈັກໃນປັດຈຸບັນແມ່ນໄດ້ຖືກກໍານົດລ່ວງໜ້າໂດຍພຣະເຈົ້າຕັ້ງແຕ່ຕອນພຣະເຈົ້າສ້າງໂລກ. ພຣະເຈົ້າປັ້ນແຕ່ງໃຫ້ວິນຍານເຫຼົ່ານີ້ດໍາລົງຊີວິດຢູ່ໃນເນື້ອໜັງໃນລະຫວ່າງຍຸກສຸດທ້າຍ ແລະ ໃນທີ່ສຸດ ພຣະເຈົ້າຈະຮັບເອົາຄົນກຸ່ມນີ້ ແລະ ຈັດກຽມໃຫ້ພວກເຂົາຢູ່ໃນຊີນິມ. ຍ້ອນແກ່ນແທ້ຂອງວິນຍານຂອງຄົນເຫຼົ່ານີ້ຄືທູດສະຫວັນ, ພຣະເຈົ້າຈຶ່ງເວົ້າວ່າ "ບໍ່ເຄີຍມີຮ່ອງຮອຍກ່ຽວກັບເຮົາໃນວິນຍານຂອງມະນຸດແທ້ບໍ?" ຕາມຄວາມຈິງແລ້ວ ເມື່ອຜູ້ຄົນດໍາລົງຊີວິດໃນເນື້ອໜັງ, ພວກເຂົາກໍຄົງບໍ່ຮູ້ຈັກເລື່ອງຕ່າງໆທີ່ຢູ່ໃນໂລກຝ່າຍວິນຍານ. ຈາກພຣະທໍາງ່າຍໆເຫຼົ່ານີ້ ນັ້ນກໍຄື "ມະນຸດ ຫຼຽວເບິ່ງເຮົາຢ່າງລະແວງ", ມັນສາມາດເຫັນໄດ້ເຖິງອາລົມຂອງພຣະເຈົ້າ. ພາຍໃນພຣະທໍາທີ່ງ່າຍດາຍເຫຼົ່ານີ້, ຈິດຕະວິທະຍາທີ່ຊັບຊ້ອນຂອງພຣະເຈົ້າແມ່ນໄດ້ສະແດງອອກມາ. ຕັ້ງແຕ່ເວລາແຫ່ງການສ້າງຈົນເຖິງປັດຈຸບັນ, ມີຄວາມໂສກເສົ້າພ້ອມກັບຄວາມໂມໂຫ ແລະ ການພິພາກສາໃນຫົວໃຈຂອງພຣະເຈົ້າຢູ່ສະເໝີ, ຍ້ອນຜູ້ຄົນທີ່ຢູ່ເທິງແຜ່ນດິນໂລກບໍ່ສາມາດໃສ່ໃຈກັບຄວາມປະສົງຂອງພຣະເຈົ້າ, ຄືກັບທີ່ພຣະເຈົ້າເວົ້າວ່າ "ມະນຸດເໝືອນຄົນປ່າເຖື່ອນທີ່ຢູ່ເທິງພູເຂົາ". ແລ້ວພຣະເຈົ້າຍັງເວົ້າວ່າ "ແລ້ວມື້ນັ້ນຈະມາເຖິງ ມື້ທີ່ມະນຸດລອຍຂ້າມມະຫາສະໝຸດທີ່ກວ້າງໃຫຍ່ມາຫາເຮົາ ເພື່ອວ່າເຂົາອາດຈະໄດ້ຮັບຄວາມຮັ່ງມີເທິງແຜ່ນດິນໂລກ ແລະ ປະຖິ້ມຄວາມສ່ຽງທີ່ຈະຖືກກືນໂດຍທະເລ". ນີ້ແມ່ນຄວາມສໍາເລັດຕາມຄວາມປະສົງຂອງພຣະເຈົ້າ ແລະ ຍັງສາມາດບັນລະຍາຍໄດ້ວ່າເປັນກະແສທີ່ບໍ່ສາມາດຫຼີກເວັ້ນໄດ້ ແລະ ມັນເປັນສັນຍາລັກໃຫ້ກັບຄວາມສໍາເລັດແຫ່ງພາລະກິດຂອງພຣະເຈົ້າ.

ເມື່ອອານາຈັກລົງມາເທິງແຜ່ນດິນໂລກທັງໝົດ, ທຸກຄົນຈະຟື້ນຟູລັກສະນະດັ່ງເດີມຂອງພວກເຂົາ. ສະນັ້ນ ພຣະເຈົ້າຈຶ່ງເວົ້າວ່າ "ເຮົາມີຄວາມສຸກຈາກເທິງບັນລັງຂອງເຮົາ, ເຮົາດໍາລົງຊີວິດຢູ່ທ່າມກາງດວງດາວ. ທູດສະຫວັນພາກັນຖວາຍເພງໃໝ່ ແລະ ການເຕັ້ນລໍາໃໝ່ໃຫ້ກັບເຮົາ. ຄວາມອ່ອນແອ

ຂອງພວກເຂົາເອງບໍ່ໄດ້ເຮັດໃຫ້ນ້ຳຕາໄຫຼລົງໃບໜ້າຂອງພວກເຂົາອີກຕໍ່ໄປ. ເຮົາບໍ່ໄດ້ຍິນສຽງທູດສະຫວັນຮ້ອງໄຫ້ຕໍ່ໜ້າເຮົາອີກຕໍ່ໄປ ແລະ ບໍ່ມີໃຜຕໍ່ວ່າເຮົາກ່ຽວກັບຄວາມລຳບາກອີກຕໍ່ໄປ”. ສິ່ງນີ້ສະແດງໃຫ້ເຫັນວ່າ ມື້ທີ່ພຣະເຈົ້າໄດ້ຮັບສະຫງ່າລາສີຢ່າງສົມບູນແມ່ນມື້ທີ່ມະນຸດມີຄວາມສຸກກັບການພັກຜ່ອນ; ຜູ້ຄົນບໍ່ດີ້ນຮົນເນື່ອງຈາກການລົບກວນຂອງຊາຕານອີກຕໍ່ໄປ, ໂລກຢຸດກ້າວໄປຂ້າງໜ້າ ແລະ ຜູ້ຄົນກໍດຳລົງຊີວິດຢ່າງສະຫງົບ, ຍ້ອນດວງດາວຈຳນວນຫຼວງຫຼາຍທີ່ຢູ່ໃນສະຫວັນຖືກສ້າງຂຶ້ນໃໝ່ ແລະ ດວງຕາເວັນ, ດວງເດືອນ, ດວງດາວ ແລະ ອື່ນໆ ແລະ ພູເຂົາ ແລະ ແມ່ນ້ຳທີ່ຢູ່ໃນສະຫວັນ ແລະ ເທິງແຜ່ນດິນໂລກ ລ້ວນແລ້ວແຕ່ປ່ຽນແປງໄປ. ແລ້ວຍ້ອນມະນຸດໄດ້ປ່ຽນໄປ ແລະ ພຣະເຈົ້າກໍໄດ້ປ່ຽນໄປເຊັ່ນກັນ, ສະນັ້ນແລ້ວ ທຸກສິ່ງຈຶ່ງປ່ຽນແປງໄປ. ນີ້ຄືເປົ້າໝາຍສຸດຍອດຂອງແຜນການຄຸ້ມຄອງຂອງພຣະເຈົ້າ ແລະ ນີ້ຄືສິ່ງທີ່ຄວນຖືກເຮັດໃຫ້ບັນລຸໃນທີ່ສຸດ. ຈຸດປະສົງຂອງພຣະເຈົ້າໃນການກ່າວພຣະທຳເຫຼົ່ານີ້ ຫຼັກໆ ແມ່ນເພື່ອໃຫ້ມະນຸດຮູ້ຈັກພຣະອົງ. ຜູ້ຄົນບໍ່ເຂົ້າໃຈກິດບັນຍັດບໍລິຫານຂອງພຣະເຈົ້າ. ທຸກສິ່ງທີ່ພຣະເຈົ້າເຮັດແມ່ນຖືກປັ້ນແຕ່ງ ແລະ ຈັດແຈງໂດຍພຣະເຈົ້າເອງ ແລະ ພຣະເຈົ້າແມ່ນບໍ່ເຕັມໃຈໃຫ້ໃຜມາແຊກແຊງ; ກົງກັນຂ້າມ ພຣະອົງຍອມໃຫ້ທຸກຄົນເຫັນວ່າ ທຸກສິ່ງແມ່ນຖືກຈັດແຈງໂດຍພຣະເຈົ້າ ແລະ ມະນຸດບໍ່ສາມາດບັນລຸໄດ້. ເຖິງແມ່ນມະນຸດສາມາດເຫັນມັນໄດ້ ຫຼື ພົບວ່າມັນຍາກທີ່ຈະຈິນຕະນາການ, ທຸກສິ່ງກໍຖືກຄວບຄຸມໂດຍພຣະເຈົ້າພຽງຜູ້ດຽວ ແລະ ພຣະເຈົ້າກໍບໍ່ປາຖະໜາທີ່ຈະໃຫ້ມັນມີມົນທິນຈາກຄວາມຄິດແມ່ນແຕ່ໜ້ອຍດຽວຂອງມະນຸດ. ພຣະເຈົ້າຈະບໍ່ໃຫ້ອະໄພຄົນທີ່ມີສ່ວນປະກອບຢ່າງແນ່ນອນ, ແມ່ນແຕ່ໜ້ອຍດຽວກໍຕາມ; ພຣະເຈົ້າເປັນພຣະເຈົ້າ ຜູ້ເຊິ່ງຫຶງຫວງມະນຸດ ແລະ ເບິ່ງຄືກັບວ່າ ພຣະວິນຍານຂອງພຣະເຈົ້າກໍອ່ອນໄຫວໃນເລື່ອງນີ້ເປັນພິເສດ. ສະນັ້ນ ໃຜກໍຕາມທີ່ມີເຈດຕະນາແມ່ນແຕ່ໜ້ອຍດຽວທີ່ຈະແຊກແຊງກໍຈະຖືກອ້ອມລ້ອມດ້ວຍແປວໄຟທີ່ເຜົາທຳລາຍຂອງພຣະເຈົ້າທັນທີ, ປ່ຽນພວກເຂົາໃຫ້ກາຍເປັນຂີ້ເທົ່າໃນກອງໄຟ. ພຣະເຈົ້າບໍ່ຍອມໃຫ້ຜູ້ຄົນສະແດງພອນສະຫວັນຂອງພວກເຂົາຕາມທີ່ພວກເຂົາພໍໃຈ, ຍ້ອນທຸກຄົນທີ່ມີພອນສະຫວັນແມ່ນປາສະຈາກຊີວິດ; ພອນສະຫວັນທີ່ສົມມຸດຂຶ້ນເຫຼົ່ານີ້ພຽງແຕ່ຮັບໃຊ້ພຣະເຈົ້າ ແລະ ເກີດມາຈາກຊາຕານ ແລະ ສະນັ້ນ ຈຶ່ງເປັນທີ່ກຽດຊັງຂອງພຣະເຈົ້າເປັນພິເສດ ຜູ້ເຊິ່ງບໍ່ຜ່ອນຜັນໃນເລື່ອງນີ້ເລີຍ. ແຕ່ເຖິງຢ່າງໃດກໍຕາມ ມັນແມ່ນຜູ້ຄົນທີ່ຂາດຊີວິດທີ່ມັກມີສ່ວນຮ່ວມໃນພາລະກິດຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ການມີສ່ວນຮ່ວມຂອງພວກເຂົາແມ່ນຍັງບໍ່ສາມາດຄົ້ນພົບໄດ້, ຍ້ອນມັນຖືກປິດບັງໂດຍພອນສະຫວັນຂອງພວກເຂົາເອງ. ທົ່ວທັງຍຸກຕ່າງໆ ຄົນທີ່ມີພອນສະຫວັນບໍ່ເຄີຍຍຶດໝັ້ນ, ຍ້ອນພວກເຂົາປາສະຈາກຊີວິດ ແລະ ສະນັ້ນ ກໍຂາດອຳນາດໃນການຕໍ່ຕ້ານ. ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າວ່າ “ຖ້າເຮົາບໍ່ເວົ້າຢ່າງແຈ່ມແຈ້ງ, ມະນຸດກໍຈະບໍ່ຮູ້ສຶກຕົວຈັກເທື່ອ ແລະ ຈະຕົກລົງສູ່ການຂ້ຽນຕີຂອງເຮົາໂດຍບໍ່ໄດ້ຕັ້ງໃຈ, ນັ້ນກໍເພາະວ່າ ມະນຸດບໍ່ຮູ້ຈັກເຮົາທີ່ຢູ່ໃນເນື້ອໜັງ”. ທຸກຄົນທີ່ຢູ່ໃນເນື້ອໜັງ ແລະ ເລືອດແມ່ນຖືກນຳພາໂດຍພຣະເຈົ້າ, ແຕ່ດຳລົງຊີວິດຢູ່ໃນພັນທະນາການຂອງຊາຕານ ແລະ ດັ່ງນັ້ນຜູ້ຄົນຈຶ່ງບໍ່ເຄີຍມີຄວາມສຳພັນປົກກະຕິນຳກັນເອງຈັກເທື່ອ, ບໍ່ວ່າຈະເປັນຍ້ອນຕັນຫາ ຫຼື ຄວາມຮັກ ຫຼື ການຈັດກຽມຂອງສະພາບແວດລ້ອມຂອງພວກເຂົາ.

ຄວາມສຳພັນທີ່ບໍ່ປົກກະຕິດັ່ງກ່າວແມ່ນສິ່ງທີ່ພຣະເຈົ້າກຽດຊັງທີ່ສຸດ ແລະ ສະນັ້ນ ມັນເປັນຍ້ອນຄວາມສຳພັນດັ່ງກ່າວ ພຣະທຳດັ່ງຕໍ່ໄປນີ້ຈຶ່ງອອກມາຈາກປາກຂອງພຣະເຈົ້າ "ສິ່ງທີ່ເຮົາຕ້ອງການແມ່ນສິ່ງມີຊີວິດທີ່ເຕັມໄປດ້ວຍຊີວິດ, ບໍ່ແມ່ນຊາກສົບທີ່ຈົມຢູ່ໃນຄວາມຕາຍ. ເມື່ອເຮົາເນັ່ງລົງເທິງໂຕະໃນອານາຈັກ, ເຮົາຈະບັນຊາທຸກຄົນເທິງແຜ່ນດິນໂລກໃຫ້ຮັບເອົາການກວດສອບຂອງເຮົາ" ອອກມາຈາກປາກຂອງພຣະເຈົ້າ. ເມື່ອພຣະເຈົ້າຢູ່ເໜືອຈັກກະວານ, ໃນແຕ່ລະມື້ ພຣະອົງກໍສັງເກດການກະທຳທຸກຢ່າງທີ່ເກີດຈາກເນື້ອໜັງ ແລະ ເລືອດ ແລະ ບໍ່ເຄີຍເບິ່ງຂ້າມການກະທຳເຫຼົ່ານັ້ນແມ່ນແຕ່ຢ່າງດຽວ. ສິ່ງເຫຼົ່ານີ້ແມ່ນການກະທຳຂອງພຣະເຈົ້າ. ສະນັ້ນ ເຮົາແນະນຳໃຫ້ທຸກຄົນກວດສອບຄວາມຄິດ, ແນວຄິດ ແລະ ການກະທຳຂອງຕົນເອງ. ເຮົາບໍ່ຂໍໃຫ້ເຈົ້າເປັນສັນຍາລັກແຫ່ງຄວາມອັບອາຍໃຫ້ກັບພຣະເຈົ້າ, ແຕ່ເປັນການສະແດງອອກເຖິງສະຫງ່າລາສີຂອງພຣະເຈົ້າ, ເພື່ອວ່າ ໃນການກະທຳທຸກຢ່າງ, ຄຳເວົ້າ ແລະ ຊີວິດຂອງເຈົ້າ, ເຈົ້າຈະບໍ່ກາຍເປັນເປົ້າໝາຍຕົວຕະຫຼົກຂອງຊາຕານ. ນີ້ແມ່ນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກທຸກຄົນ.

# ບົດທີ 21

ໃນສາຍຕາຂອງພຣະເຈົ້າ, ຜູ້ຄົນເປັນຄືກັບສັດທີ່ຢູ່ໃນໂລກຂອງສັດ. ພວກເຂົາຕີກັນເອງ, ຂ້າກັນເອງ ແລະ ມີປະຕິກິລິຍາທີ່ພິເສດຕໍ່ກັນເອງ. ໃນສາຍຕາຂອງພຣະເຈົ້າ, ພວກເຂົາຍັງເປັນຄືກັບທະນີຄົນ, ວາງແຜນຕໍ່ສູ້ກັນເອງ ບໍ່ວ່າຈະອາຍຸສໍ່າໃດ ຫຼື ເພດໃດກໍຕາມ. ດັ່ງນັ້ນ ທຸກສິ່ງທີ່ມະນຸດຊາດທັງປວງເຮັດ ແລະ ສຳແດງອອກແມ່ນບໍ່ເຄີຍຕາມໃຈພຣະເຈົ້າຈັກເທື່ອ. ເວລາທີ່ພຣະເຈົ້າປົກປິດໃບໜ້າຂອງພຣະອົງກໍຄືເວລາທີ່ຜູ້ຄົນທົ່ວໂລກຖືກທົດສອບແທ້ຈິງ. ທຸກຄົນຮ້ອງຄາງດ້ວຍຄວາມເຈັບປວດ, ພວກເຂົາທຸກຄົນດຳລົງຊີວິດຢູ່ພາຍໃຕ້ການຂົ່ມຂູ່ຂອງໄພພິບັດ ແລະ ບໍ່ມີພວກເຂົາແມ່ນແຕ່ຄົນດຽວທີ່ເຄີຍຫຼົບໜີຈາກການພິພາກສາຂອງພຣະເຈົ້າໄດ້. ຄວາມເປັນຈິງແລ້ວ ເປົ້າໝາຍຫຼັກໆຂອງພຣະເຈົ້າໃນການກາຍມາເປັນເນື້ອໜັງກໍຄືເພື່ອພິພາກສາມະນຸດ ແລະ ກ່າວໂທດເຂົາໃນເນື້ອໜັງຂອງພຣະອົງ. ໃນຄວາມຄິດຂອງພຣະເຈົ້າ ມັນໄດ້ຖືກຕັດສິນແຕ່ດົນແລ້ວວ່າ ຜູ້ໃດຈະຖືກຊ່ວຍໃຫ້ລອດພົ້ນ ຫຼື ຖືກທຳລາຍຕາມທາດແທ້ຂອງພວກເຂົາ ແລະ ສິ່ງນີ້ຈະຖືກເຮັດໃຫ້ຊັດແຈ້ງເທື່ອລະໜ້ອຍໃນໄລຍະສຸດທ້າຍ. ເມື່ອວັນ ແລະ ເດືອນໄດ້ຜ່ານໄປ, ຜູ້ຄົນກໍປ່ຽນໄປ ແລະ ຮູບຮ່າງເດີມຂອງພວກເຂົາກໍຖືກເປີດເຜີຍ. ມັນຊັດເຈນວ່າມີໄກ່ ຫຼື ເປັດຢູ່ໃນໄຂ່ ກໍເມື່ອໄຂ່ນັ້ນແຕກອອກ. ເວລາທີ່ໄຂ່ແຕກອອກແມ່ນເວລາທີ່ໄພພິບັດເທິງໂລກຈະສິ້ນສຸດລົງ. ຈາກສິ່ງນີ້ ມັນສາມາດເຫັນໄດ້ວ່າ ກ່ອນທີ່ຈະຮູ້ຈັກວ່າມີ "ໄກ່" ຫຼື "ເປັດ" ຢູ່ໃນໄຂ່, "ໄຂ່" ຕ້ອງຖືກເຮັດໃຫ້ແຕກອອກກ່ອນ. ນີ້ແມ່ນແຜນການໃນຫົວໃຈຂອງພຣະເຈົ້າ ແລະ ມັນຈະຕ້ອງຖືກເຮັດໃຫ້ສຳເລັດ.

"ມະນຸດຊາດທີ່ຕໍ່າຊ້າ ແລະ ເປັນຕາສົມເພດເອີຍ! ເປັນຫຍັງມະນຸດຈຶ່ງຮັກເຮົາ ແຕ່ບໍ່ສາມາດປະຕິບັດຕາມເຈດຕະນາຂອງພຣະວິນຍານຂອງເຮົາ?" ຍ້ອນສະພາວະແບບນີ້ຂອງມະນຸດ, ເຂົາຈຶ່ງຕ້ອງຜ່ານການຖືກຈັດການເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ຍ້ອນວ່າ ພຣະເຈົ້າກຽດຊັງມະນຸດຊາດ, ພຣະອົງຈຶ່ງປະກາດຫຼາຍຄັ້ງວ່າ "ໂອ ມະນຸດຊາດທີ່ກະບົດທຸກຄົນເອີຍ! ພວກເຂົາຕ້ອງຖືກທຳລາຍລົງພາຍໃຕ້ຕີນຂອງເຮົາ, ພວກເຂົາຕ້ອງຫາຍໄປທ່າມກາງການຂ້ຽນຕີຂອງເຮົາ ແລະ ພວກເຂົາຕ້ອງຖືກໂຍນຖິ້ມຈາກບັນດາມະນຸດຊາດໃນມື້ທີ່ກິດຈະການອັນຍິ່ງໃຫຍ່ຂອງເຮົາຖືກເຮັດໃຫ້ສົມບູນ, ເພື່ອວ່າມະນຸດຊາດທັງປວງຈະຮູ້ຈັກໜ້າຂີ້ເຮີຂອງພວກເຂົາ". ພຣະເຈົ້າກຳລັງກ່າວຕໍ່ມະນຸດຊາດທັງປວງໃນເນື້ອໜັງ ແລະ ພຣະອົງກຳລັງກ່າວຕໍ່ຊາຕານໃນໂລກຝ່າຍວິນຍານອີກດ້ວຍ ນັ້ນກໍຄື ກ່າວເໜືອຈັກກະວານທັງປວງ. ນີ້ແມ່ນຄວາມປະສົງຂອງພຣະເຈົ້າ ແລະ ນີ້ເປັນສິ່ງທີ່ຈະຖືກເຮັດໃຫ້ສຳເລັດໂດຍແຜນການ 6.000 ປີຂອງພຣະເຈົ້າ.

ຕາມຄວາມຈິງແລ້ວ ພຣະເຈົ້າທຳມະດາເປັນພິເສດ ແລະ ມີບາງສິ່ງທີ່ສາມາດຖືກເຮັດໃຫ້ສຳເລັດໄດ້ກໍຕໍ່ເມື່ອພຣະອົງປະຕິບັດສິ່ງເຫຼົ່ານັ້ນດ້ວຍຕົວພຣະອົງເອງ ແລະ ເຫັນສິ່ງເຫຼົ່ານັ້ນດ້ວຍຕາຂອງພຣະອົງເອງ. ມັນບໍ່ໄດ້ເປັນຄືກັບທີ່ຜູ້ຄົນຈິນຕະນາການ, ພຣະເຈົ້າບໍ່ໄດ້ນອນຢູ່ລ້າໆ ແລ້ວທຸກສິ່ງກໍເປັນໄປຕາມທີ່ພຣະອົງປາຖະໜາ; ນີ້ແມ່ນຜົນຮັບຈາກການລົບກວນຜູ້ຄົນຂອງຊາຕານ ເຊິ່ງເຮັດໃຫ້ຜູ້ຄົນບໍ່

ຊັດເຈນກ່ຽວກັບໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ສະນັ້ນ ໃນລະຫວ່າງຍຸກສຸດທ້າຍ ພຣະເຈົ້າໄດ້ກາຍມາເປັນເນື້ອໜັງເພື່ອເປີດເຜີຍຄວາມເປັນຈິງຂອງພຣະອົງໃຫ້ກັບມະນຸດ ໂດຍບໍ່ມີການປິດບັງຫຍັງທັງສິ້ນ. ການບັນລະຍາຍບາງຢ່າງທີ່ກ່ຽວກັບອຸປະນິໄສຂອງພຣະເຈົ້າແມ່ນເປັນການເວົ້າເກີນຄວາມຈິງ ເຊັ່ນ: ການເວົ້າວ່າ ພຣະເຈົ້າສາມາດທຳລາຍລ້າງໂລກໄດ້ໂດຍພຣະທຳຂໍ້ດຽວ ຫຼື ຄວາມຄິດພຽງເລັກນ້ອຍ. ຜົນຕາມມາກໍຄື ຄົນສ່ວນໃຫຍ່ເວົ້າວ່າ ເມື່ອພຣະເຈົ້າມີອຳນາດເຮັດທຸກຢ່າງໄດ້ ແຕ່ເປັນຫຍັງບໍ່ສາມາດກືນກິນຊາຕານດ້ວຍຄຳດຽວໄດ້? ຄຳເວົ້າເຫຼົ່ານີ້ບໍ່ສົມເຫດສົມຜົນເລີຍ ແລະ ສະແດງໃຫ້ເຫັນວ່າຜູ້ຄົນຍັງບໍ່ຮູ້ຈັກພຣະເຈົ້າ. ກ່ອນທີ່ພຣະເຈົ້າຈະທຳລາຍລ້າງສັດຕູຂອງພຣະອົງໄດ້ກໍຈຳເປັນຕ້ອງມີຂະບວນການ, ແຕ່ມັນກໍເປັນຈິງທີ່ຈະເວົ້າວ່າ ພຣະເຈົ້າມີໄຊຊະນະເໜືອທຸກສິ່ງ: ພຣະເຈົ້າຈະເອົາຊະນະສັດຕູຂອງພຣະອົງໃນທີ່ສຸດ. ຄືກັບເມື່ອປະເທດທີ່ເຂັ້ມແຂງເອົາຊະນະປະເທດທີ່ອ່ອນແອ, ມັນຕ້ອງບັນລຸໄຊຊະນະດ້ວຍຕົວມັນເອງ, ເທື່ອລະຂັ້ນຕອນ, ບາງຄັ້ງກໍໃຊ້ກຳລັງ, ບາງຄັ້ງກໍໃຊ້ຍຸດທະສາດ. ມີຂະບວນການ, ແຕ່ມັນບໍ່ສາມາດເວົ້າໄດ້ວ່າ ຍ້ອນປະເທດທີ່ເຂັ້ມແຂງມີອາວຸດພະລັງປະລະມະນູລຸ້ນໃໝ່ ແລະ ປະເທດທີ່ອ່ອນແອກໍດ້ອຍກວ່າຫຼາຍ, ດັ່ງນັ້ນ ປະເທດທີ່ອ່ອນແອຈຶ່ງຍອມຈຳນົນໂດຍບໍ່ຕໍ່ສູ້ເລີຍ. ນັ້ນແມ່ນການໂຕ້ຖຽງທີ່ບໍ່ສົມເຫດສົມຜົນ. ມັນມີເຫດຜົນຖ້າຈະເວົ້າວ່າ ປະເທດທີ່ເຂັ້ມແຂງນັ້ນຈະໄດ້ຮັບໄຊຊະນະຢ່າງແນ່ນອນ ແລະ ປະເທດທີ່ອ່ອນແອຈະເສຍແນ່ນອນ, ແຕ່ປະເທດທີ່ເຂັ້ມແຂງ ສາມາດເວົ້າໄດ້ວ່າ ມີກຳລັງທີ່ໃຫຍ່ກວ່າເມື່ອມັນຮຸກຮານປະເທດທີ່ອ່ອນແອດ້ວຍຕົນເອງ. ສະນັ້ນ ພຣະເຈົ້າຈຶ່ງເວົ້າຢູ່ສະເໝີວ່າ ມະນຸດບໍ່ຮູ້ຈັກພຣະອົງ. ສະນັ້ນ ພຣະທຳຂ້າງເທິງນັ້ນສະແດງເຖິງດ້ານໜຶ່ງຂອງເຫດຜົນທີ່ວ່າເປັນຫຍັງມະນຸດຈຶ່ງບໍ່ຮູ້ຈັກພຣະເຈົ້າບໍ? ສິ່ງເຫຼົ່ານີ້ແມ່ນແນວຄິດຂອງມະນຸດບໍ? ເປັນຫຍັງພຣະເຈົ້າຈຶ່ງພຽງແຕ່ຂໍໃຫ້ມະນຸດຮູ້ຈັກຄວາມເປັນຈິງຂອງພຣະອົງ ແລະ ດ້ວຍເຫດນັ້ນຈຶ່ງກາຍເປັນເນື້ອໜັງດ້ວຍຕົວເອງ? ສະນັ້ນ ຄົນສ່ວນໃຫຍ່ກໍພາກັນນະມັດສະການສະຫວັນຢ່າງຈິງໃຈ, ແຕ່ "ສະຫວັນບໍ່ເຄີຍໄດ້ຮັບຜົນກະທົບຈາກການກະທຳຂອງມະນຸດແມ່ນແຕ່ໜ້ອຍດຽວ ແລະ ຖ້າການປະຕິບັດຂອງເຮົາຕໍ່ມະນຸດແມ່ນອີງຕາມການກະທຳທຸກຢ່າງຂອງມະນຸດ, ແລ້ວມະນຸດຊາດທັງປວງກໍຈະດຳລົງຊີວິດທ່າມກາງການຂ້ຽນຕີຂອງເຮົາ".

ພຣະເຈົ້າເບິ່ງທະລຸເຖິງທາດແທ້ຂອງມະນຸດ. ໃນຖ້ອຍຄຳຂອງພຣະເຈົ້າ, ພຣະເຈົ້າເບິ່ງຄື "ທໍລະມານ" ຫຼາຍກັບມະນຸດ ຈົນພຣະອົງບໍ່ສົນໃຈທີ່ຈະໃສ່ໃຈກັບມະນຸດອີກເລີຍ ຫຼື ບໍ່ມີຄວາມຫວັງໃນເຂົາແມ່ນແຕ່ໜ້ອຍດຽວ; ເບິ່ງຄືກັບວ່າ ມະນຸດແມ່ນເກີນຄວາມລອດພົ້ນແລ້ວ. "ເຮົາໄດ້ເຫັນຫຼາຍຄົນທີ່ມີນໍ້າຕາໄຫຼລົງອາບແກ້ມຂອງພວກເຂົາ ແລະ ເຮົາໄດ້ເຫັນຫຼາຍຄົນຖວາຍຫົວໃຈຂອງພວກເຂົາເພື່ອແລກປ່ຽນກັບຄວາມຮັ່ງມີຂອງເຮົາ. ເຖິງແມ່ນວ່າຈະມີ 'ຄວາມອຸທິດຕົນຢ່າງແຮງກ້າ' ດັ່ງກ່າວ, ເຮົາກໍບໍ່ເຄີຍເຕັມໃຈມອບທັງໝົດຂອງເຮົາໃຫ້ກັບມະນຸດຍ້ອນຄວາມປາຖະໜາທັນທີທັນໃດຂອງເຂົາ, ເພາະວ່າມະນຸດບໍ່ເຄີຍເຕັມໃຈທີ່ຈະອຸທິດຕົນຕໍ່ໜ້າເຮົາດ້ວຍຄວາມຍິນດີ". ເມື່ອພຣະເຈົ້າເປີດເຜີຍທຳມະຊາດຂອງມະນຸດ, ມະນຸດກໍອາຍກ່ຽວກັບຕົນເອງ, ແຕ່ນີ້ເປັນພຽງຄວາມຮູ້ສຶກຜິວເຜີນ ແລະ ເຂົາແມ່ນບໍ່ສາມາດຮູ້ຈັກທຳມະຊາດຂອງເຂົາຢ່າງແທ້ຈິງໃນພຣະທຳຂອງພຣະເຈົ້າ; ສະນັ້ນ ຄົນສ່ວນໃຫຍ່ຈຶ່ງບໍ່ຮູ້ຈັກ

ຄວາມປະສົງຂອງພຣະເຈົ້າ, ພວກເຂົາບໍ່ສາມາດຄົ້ນພົບເສັ້ນທາງສຳລັບຊີວິດຂອງພວກເຂົາໃນພຣະທຳຂອງພຣະເຈົ້າ ແລະ ສະນັ້ນ ຍິ່ງພວກເຂົາໂງ່ຈ້າສ່ຳໃດ, ພຣະເຈົ້າກໍເຍາະເຍີ້ຍພວກເຂົາຢ່າງຮຸນແຮງສ່ຳນັ້ນ. ສະນັ້ນ ພວກເຂົາຈຶ່ງເຂົ້າສູ່ບົດບາດທີ່ເປັນຕາຢ້ານໂດຍບໍ່ຮູ້ຕົວ ແລະ ຜົນຕາມມາກໍຄື ພວກເຂົາໄດ້ມາຮູ້ຈັກກັບຕົນເອງ ເພາະພວກເຂົາຖືກແທງດ້ວຍ “ດາບອ່ອນ”. ພຣະທຳຂອງພຣະເຈົ້າເບິ່ງຄືກັບຕົບມືໃຫ້ກັບການກະທຳຂອງມະນຸດ ແລະ ສົ່ງເສີມການກະທຳຂອງມະນຸດ ແຕ່ຜູ້ຄົນຮູ້ສຶກຢູ່ສະເໝີວ່າພຣະເຈົ້າກຳລັງເຍາະເຍີ້ຍພວກເຂົາ. ແລ້ວດ້ວຍເຫດນັ້ນ ເມື່ອພວກເຂົາອ່ານພຣະທຳຂອງພຣະເຈົ້າກ້າມຊີ້ນທີ່ຢູ່ເທິງໃບໜ້າຂອງພວກເຂົາກໍເນັ້ງຕຶງຄັ້ງແລ້ວຄັ້ງເລົ່າ ຄືກັບວ່າພວກເຂົາກຳລັງຊັກດິ້ນ. ນີ້ແມ່ນຄວາມສຳນຶກທີ່ບໍ່ບໍລິສຸດຂອງພວກເຂົາ ແລະ ມັນເປັນຍ້ອນສິ່ງນີ້ ພວກເຂົາຈຶ່ງດິ້ນໂດຍບໍ່ຕັ້ງໃຈ. ຄວາມເຈັບປວດຂອງພວກເຂົາແມ່ນສິ່ງທີ່ພວກເຂົາຢາກຫົວ ແຕ່ພວກເຂົາກໍຫົວບໍ່ໄດ້, ຢາກໄຫ້ ແຕ່ພວກເຂົາກໍໄຫ້ບໍ່ໄດ້, ຍ້ອນຄວາມເປັນຕາຫົວຂອງຜູ້ຄົນແມ່ນຖືກຫຼິ້ນເທິງເຄື່ອງຄວບຄຸມໄລຍະໄກຂອງ “ເຄື່ອງຫຼິ້ນກະແຊັດວິດີໂອ”, ແຕ່ພວກເຂົາບໍ່ສາມາດປິດມັນໄດ້ ນອກຈາກແຕ່ອົດທົນ. ເຖິງແມ່ນ “ການໃສ່ໃຈກັບພຣະທຳຂອງພຣະເຈົ້າ” ຖືກເທດສະໜາໃນລະຫວ່າງການຊຸມນຸມຂອງເພື່ອນຮ່ວມງານທຸກຄືນ, ຜູ້ໃດບໍ່ຮູ້ຈັກກ່ຽວກັບທຳມະຊາດຂອງລູກຂອງມັງກອນແດງໃຫຍ່ແດ່? ເມື່ອຢູ່ຕໍ່ໜ້າ ພວກເຂົາກໍເຊື່ອຟັງຄືກັບລູກແກະ, ແຕ່ເມື່ອຢູ່ລັບຫຼັງ ພວກເຂົາກໍປາເຖື່ອນຄືກັບໝາປ່າ ເຊິ່ງສາມາດເຫັນໄດ້ໃນພຣະທຳຂອງພຣະເຈົ້າທີ່ວ່າ “ຫຼາຍຄົນຮັກເຮົາຢ່າງແທ້ຈິງ ເມື່ອເຮົາສະໜອງພຣະທຳຂອງເຮົາໃຫ້, ແຕ່ບໍ່ຖະໜຸຖະໜອມພຣະທຳຂອງເຮົາໃນຈິດວິນຍານຂອງພວກເຂົາ, ກົງກັນຂ້າມພວກເຂົາໃຊ້ພຣະທຳເຫຼົ່ານັ້ນແບບຊົ່ວຄາວຄືກັນກັບຊັບສິນສາທາລະນະ ແລະ ໂຍນພຣະທຳເຫຼົ່ານັ້ນກັບຄືນບ່ອນເກົ່າເມື່ອໃດກໍຕາມທີ່ພວກເຂົາຮູ້ສຶກຢາກເຮັດ”. ເປັນຫຍັງພຣະເຈົ້າຈຶ່ງເປີດໂປງມະນຸດຢູ່ສະເໝີ? ສິ່ງນີ້ສະແດງໃຫ້ເຫັນວ່າທຳມະຊາດເດີມຂອງມະນຸດບໍ່ເຄີຍຫວັ່ນໄຫວແມ່ນແຕ່ໜ້ອຍດຽວ. ຄືກັບພູເຂົາທາຍ, ມັນຕັ້ງສູງຢູ່ໃນຫົວໃຈຂອງຄົນຫຼາຍຮ້ອຍລ້ານຄົນ, ແຕ່ມື້ໜຶ່ງຈະມາເຖິງ ມື້ທີ່ຢູກອງໄດ້ເຄື່ອນຍ້າຍພູເຂົານັ້ນ; ນີ້ແມ່ນແຜນການຂອງພຣະເຈົ້າ. ໃນຖ້ອຍຄຳຂອງພຣະອົງ, ບໍ່ມີໄລຍະເວລາໃດທີ່ພຣະເຈົ້າຈະບໍ່ຮຽກຮ້ອງຈາກມະນຸດ, ເຕືອນມະນຸດ, ຫຼື ຊີ້ໃຫ້ເຫັນເຖິງທຳມະຊາດຂອງມະນຸດເຊິ່ງຖືກເປີດເຜີຍໃນຊີວິດຂອງເຂົາ “ເມື່ອມະນຸດຫ່າງເຫີນຈາກເຮົາ ແລະ ເມື່ອເຂົາທົດສອບເຮົາ, ເຮົາກໍເຊື່ອງຊ້ອນຕົນເອງຈາກເຂົາໃນກ້ອນເມກ. ຜົນຕາມມາກໍຄື ເຂົາບໍ່ສາມາດຄົ້ນພົບຮ່ອງຮອຍຂອງເຮົາໄດ້ເລີຍ ແລະ ພຽງແຕ່ດຳລົງຊີວິດດ້ວຍມືຂອງຄົນຊົ່ວຮ້າຍ, ເຮັດທຸກສິ່ງທີ່ພວກເຂົາຮ້ອງຂໍ”. ໃນຄວາມເປັນຈິງ, ຜູ້ຄົນເກືອບຈະບໍ່ມີໂອກາດທີ່ຈະດຳລົງຊີວິດຢູ່ຕໍ່ໜ້າພຣະເຈົ້າ, ຍ້ອນພວກເຂົາມີຄວາມປາຖະໜາໜ້ອຍເກີນໄປໃນການສະແຫວງຫາ; ຜົນຕາມມາກໍຄື ເຖິງແມ່ນຄົນສ່ວນໃຫຍ່ຈະຮັກພຣະເຈົ້າ, ພວກເຂົາກໍດຳລົງຊີວິດຢູ່ພາຍໃຕ້ກຳມືຂອງສິ່ງຊົ່ວຮ້າຍ ແລະ ທຸກສິ່ງທີ່ພວກເຂົາເຮັດກໍຖືກຊີ້ນຳໂດຍສິ່ງຊົ່ວຮ້າຍ. ຖ້າຜູ້ຄົນດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະເຈົ້າຢ່າງແທ້ຈິງ, ສະແຫວງຫາພຣະເຈົ້າໃນທຸກໄລຍະເວລາ ແລະ ທຸກມື້, ມັນກໍບໍ່ຈຳເປັນທີ່ຈະໃຫ້ພຣະເຈົ້າເວົ້າແບບນີ້, ແມ່ນບໍ? ເມື່ອມະນຸດປະວາງຂໍ້ຄວາມ, ພວກເຂົາກໍປະວາງພຣະເຈົ້າໄວ້ກັບໜັງສືນັ້ນ ແລະ ສະນັ້ນ ພວກເຂົາຈຶ່ງ

ຫຍຸ້ງຕົນເອງກັບທຸລະຂອງພວກເຂົາເອງ, ຫຼັງຈາກນັ້ນ ພຣະເຈົ້າກໍຫາຍໄປຈາກຫົວໃຈຂອງພວກເຂົາ. ແຕ່ເມື່ອພວກເຂົາຈັບປຶ້ມຂຶ້ນມາອີກຄັ້ງ, ພວກເຂົາກໍນຶກຂຶ້ນໄດ້ວ່າ ພວກເຂົາໄດ້ປະພຣະເຈົ້າໄວ້ໃນດ້ານຫຼັງຄວາມຄິດຂອງພວກເຂົາ. ຊີວິດດັ່ງກ່າວຂອງມະນຸດແມ່ນ “ປາສະຈາກຄວາມຊົງຈຳ”. ຍິ່ງພຣະເຈົ້າເວົ້າຫຼາຍສໍ່າໃດ, ພຣະທຳຂອງພຣະອົງຍິ່ງສູງສົ່ງຫຼາຍສໍ່ານັ້ນ. ເມື່ອພຣະທຳເຫຼົ່ານັ້ນໄດ້ໄປເຖິງຈຸດສູງສຸດຂອງມັນ, ພາລະກິດທຸກຢ່າງກໍຈະຖືກເຮັດໃຫ້ສຳເລັດລົງ ແລະ ຜົນຕາມມາກໍຄື ພຣະເຈົ້າຢຸດກ່າວພຣະທຳຂອງພຣະອົງ. ຫຼັກການທີ່ພຣະເຈົ້າປະຕິບັດພາລະກິດແມ່ນເພື່ອເຮັດໃຫ້ພາລະກິດຂອງພຣະອົງສຳເລັດລົງ ເມື່ອມັນໄປເຖິງຈຸດສູງສຸດ; ພຣະອົງບໍ່ໄດ້ສືບຕໍ່ປະຕິບັດພາລະກິດ ເມື່ອມັນໄປເຖິງຈຸດສູງສຸດແລ້ວ, ແຕ່ເຊົາທັນທີ. ພຣະອົງບໍ່ເຄີຍປະຕິບັດພາລະກິດທີ່ບໍ່ຈຳເປັນ.

# ບົດທີ 22 ແລະ 23

ໃນປັດຈຸບັນ, ທຸກຄົນແມ່ນເຕັມໃຈທີ່ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຮູ້ຈັກອຸປະນິໄສຂອງພຣະເຈົ້າ ແຕ່ກໍບໍ່ມີໃຜຮູ້ເຫດຜົນວ່າ ເປັນຫຍັງພວກເຂົາຈຶ່ງບໍ່ສາມາດປະຕິບັດຕາມສິ່ງທີ່ພວກເຂົາເຕັມໃຈເຮັດ, ເປັນຫຍັງໃຈຂອງພວກເຂົາຈຶ່ງທໍລະຍົດພວກເຂົາ ແລະ ເປັນຫຍັງພວກເຂົາຈຶ່ງບໍ່ສາມາດບັນລຸສິ່ງທີ່ພວກເຂົາຕ້ອງການ. ດ້ວຍເຫດນັ້ນ, ພວກເຂົາຈຶ່ງຖືກອ້ອມລ້ອມໄປດ້ວຍຄວາມໝົດຫວັງຢ່າງໜັກອີກຄັ້ງ ແຕ່ພວກເຂົາກໍຍັງຢ້ານກົວ. ເມື່ອບໍ່ສາມາດສະແດງອາລົມທີ່ຄັດກັນເຫຼົ່ານີ້ ພວກເຂົາຈຶ່ງໄດ້ແຕ່ເຮັດຄໍຕົກດ້ວຍຄວາມໂສກເສົ້າ ແລະ ຖາມຕົວເອງຊໍ້າແລ້ວຊໍ້າອີກວ່າ: "ເປັນໄປໄດ້ບໍທີ່ພຣະເຈົ້າບໍ່ໄດ້ໃຫ້ແສງສະຫວ່າງແກ່ຂ້ານ້ອຍ? ເປັນໄປໄດ້ບໍທີ່ພຣະເຈົ້າໄດ້ປະຖິ້ມຂ້ານ້ອຍຢ່າງລັບໆ? ບາງເທື່ອຄົນອື່ນແມ່ນມີຄວາມສຸກດີ ແລະ ພຣະເຈົ້າໄດ້ໃຫ້ແສງສະຫວ່າງແກ່ທຸກຄົນນອກຈາກຂ້ານ້ອຍ. ເປັນຫຍັງຂ້ານ້ອຍຄືຮູ້ສຶກບໍ່ສະບາຍໃຈຕະຫຼອດ ເມື່ອຂ້ານ້ອຍອ່ານພຣະທຳຂອງພຣະເຈົ້າ, ເປັນຫຍັງຂ້ານ້ອຍຈຶ່ງບໍ່ເຄີຍເຂົ້າໃຈຫຍັງເລີຍ?" ເຖິງແມ່ນວ່າ ຄວາມຄິດດັ່ງກ່າວຈະມີຢູ່ໃນຈິດໃຈຂອງຜູ້ຄົນ, ແຕ່ກໍບໍ່ມີໃຜກ້າທີ່ຈະສະແດງພວກມັນອອກມາ; ພວກເຂົາພຽງແຕ່ສືບຕໍ່ດີ້ນລົນຢູ່ພາຍໃນ. ທີ່ຈິງແລ້ວ, ບໍ່ມີໃຜ ນອກຈາກພຣະເຈົ້າທີ່ສາມາດເຂົ້າໃຈພຣະທຳຂອງພຣະອົງ ຫຼື ເຂົ້າໃຈຄວາມປະສົງທີ່ແທ້ຈິງຂອງພຣະອົງ. ແຕ່ພຣະເຈົ້າກໍຂໍໃຫ້ຜູ້ຄົນເຂົ້າໃຈຄວາມປະສົງຂອງພຣະອົງສະເໝີ. ນີ້ບໍ່ຄືກັນກັບການພະຍາຍາມບັງຄັບໃຫ້ເປັດປີນຂຶ້ນຮາວບໍ? ພຣະເຈົ້າບໍ່ຮູ້ຄວາມລົ້ມເຫຼວຂອງມະນຸດບໍ? ນີ້ແມ່ນຈຸດເຊື່ອມຕໍ່ຂອງພາລະກິດຂອງພຣະເຈົ້າ, ມັນແມ່ນສິ່ງທີ່ຜູ້ຄົນບໍ່ເຂົ້າໃຈ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າວ່າ: "ມະນຸດດຳລົງຊີວິດທ່າມກາງແສງສະຫວ່າງ ແຕ່ເຂົາກໍບໍ່ຮູ້ເຖິງຄວາມລໍ້າຄ່າຂອງແສງສະຫວ່າງນັ້ນ. ເຂົາບໍ່ໃສ່ໃຈຕໍ່ແກ່ນແທ້ຂອງແສງສະຫວ່າງ ແລະ ແຫຼ່ງກຳເນີດແສງສະຫວ່າງ ແລະ ຍິ່ງໄປກວ່ານັ້ນເຂົາບໍ່ໃສ່ໃຈວ່າ ແສງສະຫວ່າງນັ້ນເປັນຂອງໃຜ". ອີງຕາມສິ່ງທີ່ພຣະທຳຂອງພຣະເຈົ້າບອກມະນຸດ ແລະ ສິ່ງທີ່ພຣະອົງຂໍຈາກມະນຸດ, ບໍ່ມີໃຜຈະລອດຊີວິດໄດ້ ເນື່ອງຈາກວ່າ ບໍ່ມີຫຍັງໃນເນື້ອໜັງຂອງມະນຸດທີ່ຍອມຮັບເອົາພຣະທຳຂອງພຣະເຈົ້າ, ສະນັ້ນ ການສາມາດເຊື່ອຟັງພຣະທຳຂອງພຣະເຈົ້າ, ຖະໜຸຖະໜອມ ແລະ ສະແຫວງຫາພຣະທຳຂອງພຣະເຈົ້າ ແລະ ນຳໃຊ້ພຣະທຳເຫຼົ່ານັ້ນຂອງພຣະເຈົ້າ ຊີ້ເຖິງສະພາບຂອງມະນຸດເພື່ອໃຫ້ເຫັນສະພາບຂອງພວກເຂົາເອງ ແລະ ດ້ວຍເຫດນັ້ນ ຈຶ່ງມາຮູ້ຈັກຕົວພວກເຂົາເອງ; ນີ້ແມ່ນມາດຕະຖານທີ່ສູງສຸດ. ເມື່ອໃນທີ່ສຸດອານາຈັກໄດ້ກາຍເປັນຈິງ, ມະນຸດຜູ້ທີ່ດຳລົງຊີວິດຢູ່ໃນເນື້ອໜັງຍັງຈະບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຍັງຈະຕ້ອງການການຊີ້ນຳເປັນການສ່ວນຕົວຈາກພຣະເຈົ້າ; ແຕ່ຜູ້ຄົນຈະບໍ່ມີການແຊກແຊງຂອງຊາຕານ ແລະ ຈະມີຊີວິດປົກກະຕິຂອງມະນຸດ; ນີ້ແມ່ນຈຸດປະສົງຂອງພຣະເຈົ້າໃນການເອົາຊະນະຊາຕານ ເຊິ່ງພຣະອົງປະຕິບັດເປັນຫຼັກ ເພື່ອຟື້ນຟູແກ່ນແທ້ດັ່ງເດີມຂອງມະນຸດ ຜູ້ທີ່ຖືກຊົງສ້າງໂດຍພຣະເຈົ້າ. ໃນຄວາມຄິດຂອງພຣະເຈົ້າ, "ເນື້ອໜັງ" ແມ່ນໝາຍເຖິງສິ່ງຕໍ່ໄປນີ້: ຄວາມບໍ່ສາມາດຮູ້ຈັກແກ່ນແທ້ຂອງພຣະເຈົ້າ; ຄວາມບໍ່ສາມາດເຫັນວຽກງານຂອງໂລກແຫ່ງວິນຍານ ແລະ ນອກຈາກນັ້ນ ກໍຄືຄວາມສາມາດທີ່ຈະຖືກ

ຊາຕານເຮັດໃຫ້ເສື່ອມຊາມ ແຕ່ຍັງຖືກຊີ້ນໍາໂດຍກິງຈາກພຣະວິນຍານຂອງພຣະເຈົ້າ. ນີ້ແມ່ນທາດແທ້ຂອງເນື້ອໜັງທີ່ພຣະເຈົ້າສ້າງ. ໂດຍທໍາມະຊາດແລ້ວ ມັນຍັງເພື່ອຫຼີກເວັ້ນຄວາມສັບສົນ ທີ່ເກີດຈາກການຂາດລະບຽບໃນຊີວິດຂອງມະນຸດ. ຍິ່ງພຣະເຈົ້າກ່າວ ແລະ ຍິ່ງພຣະອົງກ່າວຢ່າງເລິກເຊິ່ງສໍ່າໃດ ຜູ້ຄົນກໍຍິ່ງເຂົ້າໃຈຫຼາຍສໍ່ານັ້ນ. ຜູ້ຄົນປ່ຽນແປງໂດຍບໍ່ຮູ້ສຶກຕົວ ແລະ ດໍາລົງຊີວິດໃນແສງສະຫວ່າງໂດຍບໍ່ຮູ້ສຶກຕົວ ແລະ ດ້ວຍເຫດນັ້ນ “ຍ້ອນແສງສະຫວ່າງ ທຸກຄົນຈຶ່ງເຕີບໃຫຍ່ ແລະ ໄດ້ອອກຈາກຄວາມມືດ”. ນີ້ແມ່ນພາບທີ່ສວຍງາມຂອງອານາຈັກ ແລະ ຄື “ການດໍາລົງຊີວິດໃນແສງສະຫວ່າງ ແລະ ການອອກຈາກຄວາມຕາຍ” ທີ່ຖືກກ່າວເຖິງເປັນປະຈໍາໃນອະດີດ. ເມື່ອດິນແດນຊີນິມຖືກເຮັດໃຫ້ເປັນຈິງເທິງແຜ່ນດິນໂລກ, ເມື່ອອານາຈັກຖືກເຮັດໃຫ້ເປັນຈິງ ກໍຈະບໍ່ມີສົງຄາມເທິງແຜ່ນດິນໂລກອີກຕໍ່ໄປ; ຈະບໍ່ມີຄວາມອຶດຢາກ, ໂລກລະບາດ ແລະ ແຜ່ນດິນໄຫວອີກຕໍ່ໄປ; ຜູ້ຄົນຈະຢຸດຜະລິດອາວຸດ; ທຸກຄົນຈະດໍາລົງຊີວິດໃນຄວາມສະຫງົບ ແລະ ຄວາມໝັ້ນຄົງ; ແລະ ຈະມີການປະຕິບັດຢ່າງປົກກະຕິລະຫວ່າງປະຊາຊົນ ແລະ ລະຫວ່າງປະເທດຊາດຕ່າງໆ. ແຕ່ປັດຈຸບັນແມ່ນບໍ່ມີຫຍັງທີ່ຈະປຽບທຽບກັບສິ່ງນີ້ໄດ້. ທຸກສິ່ງທຸກຢ່າງທີ່ຢູ່ໃຕ້ສະຫວັນແມ່ນຢູ່ໃນຄວາມສັບສົນວຸ້ນວາຍ ແລະ ລັດຖະປະຫານກໍເລີ່ມເກີດຂຶ້ນໃນແຕ່ລະປະເທດເທື່ອລະໜ້ອຍ. ຫຼັງຈາກການກ່າວພຣະວັດຈະນະຂອງພຣະເຈົ້າ ຜູ້ຄົນກໍປ່ຽນແປງເທື່ອລະໜ້ອຍ ແລະ ທຸກປະເທດກໍຖືກທໍາລາຍຢູ່ຂ້າງໃນຢ່າງຊ້າໆ. ພື້ນຖານທີ່ໝັ້ນຄົງຂອງບາບີໂລນກໍເລີ່ມສັ່ນຄອນ ຄືກັບຜາສາດເທິງດິນຊາຍ ແລະ ເມື່ອຄວາມປະສົງຂອງພຣະເຈົ້າຜັນປ່ຽນ, ການປ່ຽນແປງທີ່ຍິ່ງໃຫຍ່ກໍເກີດຂຶ້ນໃນໂລກໂດຍບໍ່ມີໃຜສັງເກດເຫັນ ແລະ ປ້າຍທຸກຮູບແບບກໍປາກົດຂຶ້ນທຸກໆເວລາເຊິ່ງສະແດງໃຫ້ຜູ້ຄົນເຫັນວ່າ ຍຸກສຸດທ້າຍຂອງໂລກໄດ້ມາຮອດແລ້ວ! ນີ້ແມ່ນແຜນການຂອງພຣະເຈົ້າ; ສິ່ງເຫຼົ່ານີ້ແມ່ນຂັ້ນຕອນທີ່ພຣະອົງປະຕິບັດພາລະກິດ ແລະ ແຕ່ລະປະເທດຈະຖືກທໍາລາຍເປັນເສດສ່ວນຢ່າງແນ່ນອນ, ເມືອງໂຊໂດມເກົ່າຈະຖືກທໍາລາຍລ້າງເປັນຄັ້ງທີສອງ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເວົ້າວ່າ: “ແຜ່ນດິນໂລກກໍາລັງຫຼົ້ມຈົມ! ບາບີໂລນກໍາລັງເປັນອໍາມະພາດ!” ບໍ່ມີຜູ້ໃດ ນອກຈາກພຣະເຈົ້າເອງ ທີ່ສາມາດເຂົ້າໃຈສິ່ງນີ້ຢ່າງຄົບຖ້ວນ; ແທ້ຈິງແລ້ວ ການຮັບຮູ້ຂອງຜູ້ຄົນແມ່ນມີຂໍ້ຈໍາກັດ. ຍົກຕົວຢ່າງ: ລັດຖະມົນຕີກະຊວງພາຍໃນອາດຈະຮູ້ວ່າ ສະຖານະການໃນປັດຈຸບັນແມ່ນບໍ່ໝັ້ນຄົງ ແລະ ສັບສົນວຸ້ນວາຍ ແຕ່ພວກເຂົາກໍບໍ່ສາມາດຈັດການກັບສິ່ງເຫຼົ່ານັ້ນໄດ້. ພວກເຂົາພຽງແຕ່ສາມາດຂີ່ຄື້ນກະແສເທົ່ານັ້ນ ໂດຍຫວັງຢູ່ໃນໃຈຂອງພວກເຂົາເຖິງມື້ ທີ່ພວກເຂົາສາມາດເງີຍຫົວຂຶ້ນສູງເພື່ອມື້ທີ່ຕາເວັນຂຶ້ນໃນທິດຕາເວັນອອກຈະມາເຖິງອີກຄັ້ງ ໂດຍສ່ອງແສງໄປທົ່ວດິນແດນ ແລະ ປ່ຽນແປງສະພາບຂອງເຫດການທີ່ຮ້າຍແຮງນີ້. ແຕ່ຢ່າງໃດກໍຕາມ ພວກເຂົາບໍ່ຮູ້ເລີຍວ່າ ເມື່ອຕາເວັນຂຶ້ນເປັນຄັ້ງທີສອງ ການຂຶ້ນຂອງມັນບໍ່ແມ່ນເພື່ອຟື້ນຟູຄວາມເປັນລະບຽບດັ່ງເດີມ ແຕ່ມັນແມ່ນການເກີດໃໝ່ ເຊິ່ງເປັນການປ່ຽນແປງຢ່າງທົ່ວເຖິງ. ສິ່ງດັ່ງກ່າວແມ່ນແຜນການຂອງພຣະເຈົ້າສໍາລັບຈັກກະວານທັງໝົດ. ພຣະອົງຈະເລີ່ມຕົ້ນໂລກໃໝ່ ແຕ່ເໜືອທຸກສິ່ງອື່ນໃດ ກ່ອນອື່ນໝົດພຣະອົງຈະສ້າງມະນຸດຄືນໃໝ່. ໃນປັດຈຸບັນ, ການນໍາເອົາຜູ້ຄົນເຂົ້າສູ່ພຣະທໍາຂອງພຣະເຈົ້າແມ່ນສິ່ງທີ່ສໍາຄັນ ໂດຍບໍ່ພຽງແຕ່ເຮັດໃຫ້ພວກເຂົາມີຄວາມສຸກກັບພອນແຫ່ງສະຖານະເທົ່ານັ້ນ. ຍິ່ງໄປກວ່ານັ້ນ,

ດັ່ງທີ່ພຣະເຈົ້າເວົ້າວ່າ: "ໃນອານາຈັກ, ເຮົາເປັນກະສັດ ແຕ່ແທນທີ່ຈະປະຕິບັດຕໍ່ເຮົາຄືກັບກະສັດຂອງເຂົາ ມະນຸດກັບປະຕິບັດຕໍ່ເຮົາຄືກັບພຣະຜູ້ຊ່ວຍໃຫ້ລອດທີ່ລົງມາຈາກສະຫວັນ. ຜົນຕາມມາກໍຄື ເຂົາປາຖະໜາທີ່ຈະໃຫ້ເຮົາຖວາຍທານໃຫ້ເຂົາ ແລະ ບໍ່ສະແຫວງຫາຄວາມຮູ້ກ່ຽວກັບຕົວເຮົາເລີຍ". ສິ່ງດັ່ງກ່າວແມ່ນສະພາບການທີ່ແທ້ຈິງຂອງທຸກຄົນ. ໃນປັດຈຸບັນ, ສິ່ງທີ່ສຳຄັນແມ່ນການກຳຈັດຄວາມໂລບມາກໂລພາທີ່ບໍ່ຮູ້ຈັກພໍຂອງມະນຸດໃຫ້ໝົດສິ້ນ, ເຊິ່ງດ້ວຍເຫດນັ້ນ ກໍຈະເຮັດໃຫ້ຜູ້ຄົນຮູ້ຈັກພຣະເຈົ້າໂດຍບໍ່ຮຽກຮ້ອງສິ່ງໃດໆ. ມັນຈຶ່ງບໍ່ແປກໃຈທີ່ພຣະເຈົ້າເວົ້າວ່າ: "ຫຼາຍຄົນໄດ້ຮ້ອງໄຫ້ຢູ່ຕໍ່ໜ້າເຮົາຄືກັບເປັນຄົນຂໍທານ; ຫຼາຍຄົນໄດ້ເປີດ 'ຖົງ' ຂອງພວກເຂົາຕໍ່ເຮົາ ແລະ ອ້ອນວອນຂໍໃຫ້ເຮົາມອບອາຫານໃຫ້ພວກເຂົາເພື່ອຢູ່ລອດ". ສະພາບຕ່າງໆເຫຼົ່ານີ້ຊີ້ໃຫ້ເຫັນຄວາມໂລບມາກໂລພາຂອງຜູ້ຄົນ ແລະ ສິ່ງເຫຼົ່ານີ້ສະແດງໃຫ້ເຫັນວ່າ ຜູ້ຄົນບໍ່ຮັກພຣະເຈົ້າ ແຕ່ຮຽກຮ້ອງຈາກພຣະອົງ ຫຼື ພະຍາຍາມຮັບເອົາສິ່ງຕ່າງໆທີ່ພວກເຂົາປາດຖະໜາ. ຜູ້ຄົນມີທຳມະຊາດຂອງໝາປ່າທີ່ຫິວໂຫຍ, ພວກເຂົາມີເລ່ລ່ຽມ ແລະ ໂລບມາກໂລພາ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງສ້າງເງື່ອນໄຂໃຫ້ແກ່ພວກເຂົາຊໍ້າແລ້ວຊໍ້າອີກ ເຊິ່ງບັງຄັບໃຫ້ພວກເຂົາມອບຄວາມໂລບມາກໂລພາທີ່ຢູ່ໃນໃຈຂອງພວກເຂົາ ແລະ ຮັກພຣະເຈົ້າດ້ວຍຄວາມຈິງໃຈ. ໃນຄວາມເປັນຈິງ ປັດຈຸບັນ ຜູ້ຄົນຍັງບໍ່ໄດ້ມອບຫົວໃຈທັງໝົດຂອງພວກເຂົາໃຫ້ກັບພຣະເຈົ້າ; ພວກເຂົາຢືນຈ່າງຂາໃສ່ເຮືອສອງລຳ, ບາງຄັ້ງເພິ່ງຕົວເອງ, ບາງຄັ້ງເພິ່ງພຣະເຈົ້າ ໂດຍບໍ່ໄດ້ເພິ່ງພາພຣະເຈົ້າທັງໝົດ. ເມື່ອພາລະກິດຂອງພຣະເຈົ້າໄດ້ດຳເນີນເຖິງຈຸດໃດໜຶ່ງ, ທຸກຄົນກໍຈະດຳລົງຊີວິດຢູ່ທ່າມກາງຄວາມຮັກ ແລະ ຄວາມເຊື່ອທີ່ແທ້ຈິງ ແລະ ຄວາມປະສົງຂອງພຣະເຈົ້າກໍຈະຖືກເຮັດໃຫ້ສຳເລັດ; ສະນັ້ນ, ຄວາມຕ້ອງການຂອງພຣະເຈົ້າກໍໄດ້ບໍ່ສູງ.

ທູດສະຫວັນໄດ້ເຄື່ອນໄຫວໃນທ່າມກາງບຸດຊາຍ ແລະ ປະຊາຊົນຂອງພຣະເຈົ້າຢ່າງຕໍ່ເນື່ອງ ໂດຍຟ້າວໄປມາລະຫວ່າງສະຫວັນ ແລະ ແຜ່ນດິນໂລກ ແລະ ລົງມາສູ່ໂລກມະນຸດຫຼັງຈາກທີ່ໄດ້ກັບຄືນໄປໂລກແຫ່ງວິນຍານໃນແຕ່ລະມື້. ນີ້ແມ່ນໜ້າທີ່ຂອງພວກເຂົາ ແລະ ດ້ວຍເຫດນັ້ນ ໃນແຕ່ລະມື້ ບຸດຊາຍ ແລະ ປະຊາຊົນຂອງພຣະເຈົ້າຈຶ່ງຖືກຊີ້ນຳ ແລະ ຊີວິດຂອງພວກເຂົາກໍປ່ຽນແປງເທື່ອລະໜ້ອຍ. ໃນມື້ທີ່ພຣະເຈົ້າປ່ຽນຮູບຮ່າງຂອງພຣະອົງ, ພາລະກິດຂອງທູດສະຫວັນຢູ່ເທິງແຜ່ນດິນໂລກກໍຈະສິ້ນສຸດລົງຢ່າງເປັນທາງການ ແລະ ພວກເຂົາຈະກັບຄືນໄປໂລກແຫ່ງສະຫວັນ. ໃນປັດຈຸບັນ ບຸດຊາຍ ແລະ ປະຊາຊົນທັງໝົດຂອງພຣະເຈົ້າແມ່ນຢູ່ໃນສະພາບດຽວກັນ. ເມື່ອເວລາຜ່ານພົ້ນໄປ, ທຸກຄົນກໍໄດ້ປ່ຽນແປງ ແລະ ບຸດຊາຍ ແລະ ປະຊາຊົນຂອງພຣະເຈົ້າກໍຄ່ອຍໆເຕີບໃຫຍ່ຂຶ້ນເທື່ອລະໜ້ອຍ. ໃນການປຽບທຽບ ຜູ້ກະບົດທຸກຄົນກໍໄດ້ປ່ຽນແປງຢູ່ຕໍ່ໜ້າມັງກອນແດງທີ່ຍິ່ງໃຫຍ່ເຊັ່ນກັນ: ຜູ້ຄົນບໍ່ຈົງຮັກພັກດີຕໍ່ມັງກອນແດງທີ່ຍິ່ງໃຫຍ່ອີກຕໍ່ໄປ ແລະ ຜີຮ້າຍກໍບໍ່ປະຕິບັດຕາມການຈັດແຈງຂອງມັນອີກຕໍ່ໄປ. ກົງກັນຂ້າມ, "ທຸກສິ່ງທີ່ປະຕິບັດຄືສິ່ງທີ່ພວກເຂົາເຫັນວ່າເໝາະສົມ ແລະ ແຕ່ລະຢ່າງກໍໄປຕາມເສັ້ນທາງຂອງມັນເອງ". ສະນັ້ນ, ເມື່ອພຣະເຈົ້າເວົ້າວ່າ: "ບັນດາປະເທດຊາດທີ່ຢູ່ເທິງແຜ່ນດິນໂລກຈະບໍ່ຈິບຫາຍໄດ້ແນວໃດ? ບັນດາປະເທດຊາດທີ່ຢູ່ເທິງແຜ່ນດິນໂລກຈະບໍ່ລົ້ມສະຫຼາຍໄດ້ແນວໃດ?" ສະຫວັນກໍຫຼົ່ນຕົກລົງມາທັນທີ... ມັນເປັນຄືກັບວ່າ ມີຄວາມຮູ້ສຶກທີ່ເປັນລາງຮ້າຍທີ່ສັງຫອນເຖິງຈຸດ

ຈົບຂອງມວນມະນຸດ. ສັນຍານທີ່ເປັນລາງຮ້າຍຕ່າງໆທີ່ຖືກທຳນາຍຢູ່ນີ້ ແມ່ນສິ່ງທີ່ເກີດຂຶ້ນໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ບໍ່ມີໃຜຢູ່ເທິງແຜ່ນດິນໂລກຈະສາມາດໜີພົ້ນໄດ້. ສິ່ງດັ່ງກ່າວແມ່ນສິ່ງທີ່ຖືກທຳນາຍໃນພຣະທຳຂອງພຣະເຈົ້າ. ໃນປັດຈຸບັນ ທຸກຄົນມີຄວາມສັງຫອນໃຈວ່າເວລາມັນສັ້ນ ແລະ ພວກເຂົາຄືກັບຮູ້ສຶກວ່າໄພພິບັດກຳລັງໃກ້ຈະເກີດຂຶ້ນກັບພວກເຂົາ ແຕ່ພວກເຂົາບໍ່ມີວິທີທາງທີ່ຈະຫຼົບໜີ ແລະ ດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງໝົດຄວາມຫວັງ. ພຣະເຈົ້າເວົ້າວ່າ: “ເມື່ອເຮົາຕົບແຕ່ງ ‘ດ້ານໃນ’ ຂອງອານາຈັກຂອງເຮົາແຕ່ລະມື້, ບໍ່ມີໃຜໂຜ່ເຂົ້າໄປໃນ ‘ຫ້ອງເຮັດວຽກ’ ຂອງເຮົາຢ່າງທັນທີເພື່ອລົບກວນພາລະກິດຂອງເຮົາ”. ທີ່ຈິງແລ້ວ, ຄວາມໝາຍຂອງພຣະທຳຂອງພຣະເຈົ້າບໍ່ແມ່ນພຽງການເວົ້າວ່າຜູ້ຄົນອາດຮູ້ຈັກພຣະເຈົ້າໃນພຣະທຳຂອງພຣະອົງເທົ່ານັ້ນ. ສຳຄັນທີ່ສຸດກໍຄືພວກເຂົາຊີ້ໃຫ້ເຫັນວ່າ ແຕ່ລະມື້ ພຣະເຈົ້າຈັດແຈງການພັດທະນາໃນທຸກຮູບແບບທົ່ວຈັກກະວານເພື່ອຮັບໃຊ້ພາກສ່ວນຕໍ່ໄປຂອງພາລະກິດຂອງພຣະອົງ. ເຫດຜົນທີ່ພຣະອົງເວົ້າວ່າ: “ບໍ່ມີໃຜໂຜ່ເຂົ້າໄປໃນ ‘ຫ້ອງເຮັດວຽກ’ ຂອງເຮົາຢ່າງທັນທີເພື່ອລົບກວນພາລະກິດ ຂອງເຮົາ” ແມ່ນຍ້ອນວ່າ ພຣະເຈົ້າເຮັດພາລະກິດໃນຄວາມເປັນພຣະເຈົ້າ ແລະ ເຖິງແມ່ນວ່າ ຜູ້ຄົນອາດມີຄວາມປາດຖະໜາ ແຕ່ພວກເຂົາກໍບໍ່ສາມາດເຂົ້າຮ່ວມພາລະກິດຂອງພຣະອົງໄດ້. ໃຫ້ເຮົາຖາມເຈົ້າວ່າ: ເຈົ້າສາມາດຈັດກຽມທຸກການພັດທະນາໃນທົ່ວຈັກກະວານໄດ້ບໍ? ເຈົ້າສາມາດເຮັດໃຫ້ຜູ້ຄົນເທິງແຜ່ນດິນໂລກບໍ່ເຊື່ອຟັງບັນພະບຸລຸດຂອງພວກເຂົາໄດ້ບໍ? ເຈົ້າສາມາດເຮັດໃຫ້ຜູ້ຄົນທົ່ວຈັກກະວານຮັບໃຊ້ຄວາມປະສົງຂອງພຣະເຈົ້າໄດ້ບໍ? ເຈົ້າສາມາດເຮັດໃຫ້ຊາຕານແລ່ນອາລະວາດໄດ້ບໍ? ເຈົ້າສາມາດເຮັດໃຫ້ຜູ້ຄົນຮູ້ສຶກວ່າໂລກນີ້ໂດດດ່ຽວ ແລະ ວ່າງເປົ່າໄດ້ບໍ? ຜູ້ຄົນບໍ່ສາມາດເຮັດສິ່ງດັ່ງກ່າວນີ້ໄດ້. ໃນອະດີດ, ເມື່ອ “ທັກສະ” ຂອງຊາຕານຍັງບໍ່ທັນຖືກເປີດເຜີຍຢ່າງເຕັມທີ່ ມັນຈະແຊກແຊງແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຈົ້າຕະຫຼອດ; ໃນຂັ້ນຕອນນີ້ ຊາຕານແມ່ນໄດ້ໝົດກົນອຸບາຍແລ້ວ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງເຮັດໃຫ້ຊາຕານສະແດງທາດແທ້ຂອງມັນ ເພື່ອວ່າ ທຸກຄົນອາດຈະຮູ້ຈັກມັນ. ນີ້ແມ່ນຄວາມຈິງກ່ຽວກັບພຣະທຳທີ່ວ່າ “ບໍ່ມີໃຜເຄີຍລົບກວນການປະຕິບັດພາລະກິດຂອງເຮົາ”.

ແຕ່ລະມື້ ຜູ້ຄົນຂອງຄຣິສຕະຈັກຈະອ່ານພຣະທຳຂອງພຣະເຈົ້າ ແລະ ແຕ່ລະມື້ ພວກເຂົາຈະວິເຄາະຢ່າງລະອຽດຢູ່ “ໂຕະຜ່າຕັດ”. ຍົກຕົວຢ່າງ: “ສູນເສຍຕຳແໜ່ງຂອງພວກເຂົາ”, “ໄລ່ອອກ”, “ຄວາມຢ້ານຂອງພວກເຂົາກໍຖືກບັນເທົາ ແລະ ຈິດໃຈກໍກັບຄືນສູ່ສະພາບເດີມ”, “ການປະຖິ້ມ” ແລະ “ປາສະຈາກຄວາມຮູ້ສຶກ”; ພຣະທຳເຍາະເຍີ້ຍດັ່ງກ່າວ “ທໍລະມານ” ຜູ້ຄົນ ແລະ ເຮັດໃຫ້ພວກເຂົາໂງ່ຈ້າດ້ວຍຄວາມອັບອາຍ; ມັນເປັນຄືກັບວ່າ ບໍ່ມີສ່ວນໃດໃນຮ່າງກາຍທັງໝົດຂອງພວກເຂົາ ຈາກຫົວຮອດນິ້ວໂປ້ຕີນ ແລະ ຈາກຂ້າງໃນຫາຂ້າງນອກຖືກອະນຸມັດໂດຍພຣະເຈົ້າ. ເປັນຫຍັງພຣະທຳຂອງພຣະເຈົ້າຈຶ່ງຮື້ຖອນຊີວິດຂອງຜູ້ຄົນຈົນບໍ່ເຫຼືອຫຍັງ? ພຣະເຈົ້າຈິງໃຈເຮັດໃຫ້ສິ່ງຕ່າງໆມີຄວາມລຳບາກສຳລັບຜູ້ຄົນບໍ? ມັນເປັນຄືກັບວ່າ ໃບໜ້າຂອງທຸກຄົນແມ່ນມີຮອຍເປື້ອນຈາກຂີ້ຕົມທີ່ບໍ່ສາມາດລ້າງອອກໄດ້. ແຕ່ລະມື້ ພວກເຂົາກົ້ມຫົວລົງ, ພວກເຂົາເລົ່າເລື່ອງລາວກ່ຽວກັບຄວາມຜິດບາບຂອງພວກເຂົາຄືກັບນັກຕົ້ມຕຸນ. ຜູ້ຄົນຖືກຊາຕານເຮັດໃຫ້ເສື່ອມຊາມຈົນວ່າ ພວກເຂົາບໍ່ຮູ້ສຶກຫຍັງ

ທັງໝົດເຖິງສະພາບຕົວຈິງຂອງພວກເຂົາເອງ. ແຕ່ສຳລັບພຣະເຈົ້າແລ້ວ, ພິດຂອງຊາຕານແມ່ນຢູ່ໃນທຸກພາກສ່ວນຂອງຮ່າງກາຍຂອງພວກເຂົາ ແມ່ນແຕ່ຢູ່ໃນໄຂກະດູກຂອງພວກເຂົາ; ດ້ວຍເຫດນັ້ນຍິ່ງການເປີດເຜີຍຂອງພຣະເຈົ້າມີຄວາມເລິກເຊິ່ງສໍ່າໃດ ຜູ້ຄົນກໍຍິ່ງຢຳເກງຫຼາຍສໍ່ານັ້ນ ແລະ ດ້ວຍເຫດນັ້ນ, ທຸກຄົນຈຶ່ງສາມາດຮູ້ຈັກຊາຕານ ແລະ ເຫັນຊາຕານໃນຕົວມະນຸດ ເພາະວ່າພວກເຂົາບໍ່ສາມາດເຫັນຊາຕານດ້ວຍຕາເປົ່າຂອງພວກເຂົາ. ເນື່ອງຈາກວ່າ ທຸກຄົນໄດ້ເຂົ້າສູ່ຄວາມເປັນຈິງ, ພຣະເຈົ້າຈຶ່ງໄດ້ເປີດເຜີຍທຳມະຊາດຂອງມະນຸດ ເຊິ່ງເວົ້າໄດ້ວ່າ ພຣະອົງໄດ້ເປີດເຜີຍຮູບລັກຂອງຊາຕານ ແລະດ້ວຍເຫດນັ້ນ ກໍເຮັດໃຫ້ມະນຸດເຫັນຊາຕານຕົວຈິງ ແລະ ສຳຜັດໄດ້ ເຊິ່ງກໍຊ່ວຍໃຫ້ພວກເຂົາຮູ້ຈັກພຣະເຈົ້າທີ່ແທ້ຈິງໄດ້ດີຂຶ້ນ. ພຣະເຈົ້າອະນຸຍາດໃຫ້ມະນຸດຮູ້ຈັກພຣະອົງໃນເນື້ອໜັງ ແລະ ມອບຮູບຮ່າງໃຫ້ແກ່ຊາຕານ ເຮັດໃຫ້ມະນຸດຮູ້ຈັກຊາຕານຕົວຈິງ ແລະ ສຳຜັດໄດ້ໃນເນື້ອໜັງຂອງທຸກຄົນ. ສະພາບຕ່າງໆທີ່ກ່າວເຖິງແມ່ນລ້ວນແລ້ວແຕ່ເປັນການສະແດງອອກຂອງການກະທຳຂອງຊາຕານ. ສະນັ້ນ, ມັນຈຶ່ງອາດເວົ້າໄດ້ວ່າ ທຸກຄົນທີ່ມີເນື້ອໜັງແມ່ນຕົວຕົນຂອງຮູບລັກຂອງຊາຕານ. ພຣະເຈົ້າເຂົ້າກັນບໍ່ໄດ້ກັບສັດຕູຂອງພຣະອົງ, ພວກເຂົາມີເຈດຕະນາຮ້າຍຕໍ່ກັນ ແລະ ເປັນສອງກອງກຳລັງທີ່ແຕກຕ່າງກັນ; ສະນັ້ນ ຜີສາດຈຶ່ງເປັນຜີສາດຕະຫຼອດໄປ ແລະ ພຣະເຈົ້າຈຶ່ງເປັນພຣະເຈົ້າຕະຫຼອດການ; ພວກເຂົາເຂົ້າກັນບໍ່ໄດ້ຄືກັນກັບໄຟ ແລະ ນໍ້າ ແລະ ຢູ່ຫ່າງຈາກກັນຄືກັບສະຫວັນ ແລະ ແຜ່ນດິນໂລກ. ເມື່ອພຣະເຈົ້າສ້າງມະນຸດ, ຜູ້ຄົນປະເພດໜຶ່ງແມ່ນມີວິນຍານຂອງທູດສະຫວັນ ແລະ ອີກປະເພດໜຶ່ງແມ່ນບໍ່ມີວິນຍານ, ດ້ວຍເຫດນັ້ນ ພວກເຂົາຈຶ່ງຖືກວິນຍານແຫ່ງຜີສາດຄອບງຳ ແລະ ດັ່ງນັ້ນ ພວກເຂົາຈຶ່ງຖືກເອີ້ນວ່າ ຜີສາດ. ໃນທີ່ສຸດ ທູດສະຫວັນກໍຄືທູດສະຫວັນ, ຜີສາດກໍຄືຜີສາດ ແລະ ພຣະເຈົ້າກໍຄືພຣະເຈົ້າ. ນີ້ຄືຄວາມໝາຍທີ່ວ່າ ແຕ່ລະຢ່າງຖືກຈັດຕາມປະເພດ ແລະ ສະນັ້ນ ເມື່ອທູດສະຫວັນໄດ້ປົກຄອງແຜ່ນດິນໂລກ ແລະ ໄດ້ຮັບພອນ, ພຣະເຈົ້າກໍຈະກັບຄືນສູ່ບ່ອນຢູ່ອາໄສຂອງພຣະອົງ ແລະສ່ວນທີ່ເຫຼືອ ນັ້ນກໍຄື ສັດຕູຂອງພຣະເຈົ້າແມ່ນຈະຖືກທຳລາຍເປັນຂີ້ເທົ່າ. ທີ່ຈິງແລ້ວ, ທາງດ້ານພາຍນອກ ທຸກຄົນແມ່ນຮັກພຣະເຈົ້າ ແຕ່ຮາກຖານແມ່ນນອນຢູ່ໃນແກ່ນແທ້ຂອງພວກເຂົາ; ຜູ້ທີ່ມີທຳມະຊາດຂອງທູດສະຫວັນຈະສາມາດຫຼຸດອອກຈາກມືຂອງພຣະເຈົ້າ ແລະ ຕົກສູ່ຂຸມເລິກທີ່ສຸດໄດ້ແນວໃດ? ຜູ້ທີ່ມີທຳມະຊາດຂອງຜີສາດຈະສາມາດຮັກພຣະເຈົ້າຢ່າງແທ້ຈິງໄດ້ແນວໃດ? ທາດແທ້ຂອງຜູ້ຄົນເຫຼົ່ານີ້ແມ່ນບໍ່ຮັກພຣະເຈົ້າຢ່າງແທ້ຈິງ ແລ້ວພວກເຂົາຈະສາມາດມີໂອກາດເຂົ້າສູ່ອານາຈັກໄດ້ແນວໃດ? ທຸກສິ່ງຖືກຈັດແຈງໂດຍພຣະເຈົ້າເມື່ອພຣະອົງສ້າງໂລກ, ດັ່ງທີ່ພຣະເຈົ້າເວົ້າວ່າ: "ເຮົາກ້າວໄປຂ້າງໜ້າທ່າມກາງລົມ ແລະ ຝົນ ແລະ ໄດ້ໃຊ້ເວລາປີແລ້ວປີເລົ່າທ່າມກາງມະນຸດຈົນເຖິງປັດຈຸບັນ. ສິ່ງເຫຼົ່ານີ້ບໍ່ແມ່ນບາດກ້າວໃນແຜນການຄຸ້ມຄອງຂອງເຮົາບໍ? ຜູ້ໃດເຄີຍເພີ່ມຫຍັງເຂົ້າໃນແຜນການຂອງເຮົາບໍ່? ຜູ້ໃດສາມາດໜີຈາກຂັ້ນຕອນຕ່າງໆທີ່ຢູ່ໃນແຜນການຂອງເຮົາບໍ່?" ການກາຍເປັນເນື້ອໜັງ, ພຣະເຈົ້າຕ້ອງປະສົບກັບຊີວິດຂອງມະນຸດ ແລະ ນີ້ບໍ່ແມ່ນດ້ານທີ່ແທ້ຈິງຂອງພຣະເຈົ້າທີ່ແທ້ຈິງບໍ? ພຣະເຈົ້າບໍ່ໄດ້ເຊື່ອງຫຍັງຈາກມະນຸດ ຍ້ອນຄວາມອ່ອນແອຂອງມະນຸດ; ກົງກັນຂ້າມພຣະອົງໄດ້ເປີດເຜີຍຄວາມຈິງຕໍ່ມະນຸດ, ດັ່ງທີ່ພຣະເຈົ້າເວົ້າວ່າ: "ເຮົາໄດ້ໃຊ້ເວລາປີແລ້ວປີເລົ່າທ່າມກາງ

ມະນຸດ". ມັນເປັນຍ້ອນວ່າ ພຣະເຈົ້າແມ່ນພຣະເຈົ້າທີ່ກາຍເປັນເນື້ອໜັງ ທີ່ພຣະອົງໄດ້ຜ່ານປີແລ້ວປີເລົ່າຢູ່ເທິງແຜ່ນດິນໂລກ; ມີພຽງຫຼັງຈາກໄດ້ປະສົບກັບຂະບວນການທຸກຮູບແບບເທົ່ານັ້ນ ພຣະອົງຈຶ່ງຈະສາມາດຖືໄດ້ວ່າເປັນພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ມີພຽງຫຼັງຈາກນັ້ນເທົ່ານັ້ນພຣະເຈົ້າຈຶ່ງຈະສາມາດປະຕິບັດພາລະກິດໃນຄວາມເປັນພຣະເຈົ້າພາຍໃນເນື້ອໜັງ. ຫຼັງຈາກນັ້ນ ພາຍຫຼັງທີ່ໄດ້ເປີດເຜີຍຄວາມລຶກລັບທັງໝົດແລ້ວ ພຣະອົງກໍຈະສາມາດປ່ຽນຮູບຮ່າງຂອງພຣະອົງ. ນີ້ແມ່ນການອະທິບາຍໃນອີກດ້ານໜຶ່ງກ່ຽວກັບ "ການບໍ່ໄດ້ຢູ່ເໜືອທຳມະຊາດ" ເຊິ່ງພຣະເຈົ້າຊີ້ນຳໂດຍກົງ.

ມັນຈຳເປັນຕ້ອງຜ່ານບົດທົດສອບຂອງພຣະທຳຂອງພຣະເຈົ້າແຕ່ລະຂໍ້ໂດຍບໍ່ແມ່ນເຮັດພໍເປັນພິທີ. ນີ້ແມ່ນການມອບໝາຍຂອງພຣະເຈົ້າ!

# ບົດທີ 24 ແລະ 25

ຖ້າບໍ່ໄດ້ອ່ານຢ່າງໃກ້ຊິດ ມັນກໍເປັນໄປບໍ່ໄດ້ທີ່ຈະກວດພົບເຫັນສິ່ງໃດໜຶ່ງໃນພຣະວັດຈະນະຂອງສອງມື້ເຫຼົ່ານີ້; ແທ້ຈິງແລ້ວ ສິ່ງເຫຼົ່ານີ້ຄວນຖືກກ່າວໃນມື້ດຽວ ແຕ່ພຣະເຈົ້າກໍໄດ້ແບ່ງສິ່ງເຫຼົ່ານີ້ອອກເປັນສອງມື້. ເວົ້າໄດ້ວ່າ ພຣະວັດຈະນະຂອງສອງມື້ເຫຼົ່ານີ້ແມ່ນເປັນອັນດຽວກັນ ແຕ່ເພື່ອເຮັດໃຫ້ມັນງ່າຍຂຶ້ນສຳລັບຜູ້ຄົນທີ່ຈະຮັບເອົາສິ່ງເຫຼົ່ານີ້ ພຣະເຈົ້າຈຶ່ງໄດ້ແບ່ງສິ່ງເຫຼົ່ານີ້ອອກເປັນສອງມື້ ເພື່ອໃຫ້ໂອກາດແກ່ຜູ້ຄົນໄດ້ຫາຍໃຈ. ສິ່ງດັ່ງກ່າວແມ່ນການພິຈາລະນາຂອງພຣະເຈົ້າທີ່ມີຕໍ່ມະນຸດ. ໃນພາລະກິດທັງໝົດຂອງພຣະເຈົ້າ, ທຸກຄົນປະຕິບັດພາລະ ແລະ ໜ້າທີ່ຂອງພວກເຂົາໃນບ່ອນຂອງພວກເຂົາເອງ. ມັນບໍ່ແມ່ນພຽງຜູ້ຄົນທີ່ມີຈິດວິນຍານຂອງທູດສະຫວັນທີ່ໃຫ້ຄວາມຮ່ວມມື; ຜູ້ທີ່ມີຈິດວິນຍານຂອງຜີສາດກໍຍັງໄດ້ "ຮ່ວມມື" ແລະ ເຊັ່ນດຽວກັນກັບຈິດວິນຍານຂອງຊາຕານ. ໃນພຣະວັດຈະນະຂອງພຣະເຈົ້າ ແມ່ນພົບເຫັນຄວາມປະສົງຂອງພຣະເຈົ້າ ແລະ ຄວາມຕ້ອງການຂອງພຣະອົງທີ່ມີຕໍ່ມະນຸດ. ພຣະທຳທີ່ວ່າ: "ການຂ້ຽນຕີຂອງເຮົາໄດ້ມາເຖິງບັນດາຜູ້ຄົນ, ແຕ່ມັນກໍຍັງຄົງຫ່າງໄກຈາກຜູ້ຄົນທັງປວງ. ຊົ່ວຊີວິດຂອງທຸກຄົນແມ່ນເຕັມໄປດ້ວຍຄວາມຮັກ ແລະ ຄວາມກຽດຊັງຕໍ່ເຮົາ" ສະແດງໃຫ້ເຫັນວ່າພຣະເຈົ້າໃຊ້ການຂ້ຽນຕີເພື່ອຂົ່ມຂູ່ທຸກຄົນ ໂດຍເຮັດໃຫ້ພວກເຂົາໄດ້ຮັບຄວາມຮູ້ກ່ຽວກັບພຣະອົງ. ຍ້ອນຄວາມເສື່ອມຊາມຂອງຊາຕານ ແລະ ຄວາມອ່ອນແອຂອງທູດສະຫວັນ ພຣະເຈົ້າຈຶ່ງໄດ້ໃຊ້ແຕ່ພຣະທຳເທົ່ານັ້ນ ແລະ ບໍ່ໄດ້ໃຊ້ກົດບັນຍັດແຫ່ງການບໍລິຫານເພື່ອຂ້ຽນຕີຜູ້ຄົນ. ນັບຕັ້ງແຕ່ເວລາແຫ່ງການຊົງສ້າງຈົນຮອດປັດຈຸບັນ ນີ້ແມ່ນຫຼັກການຂອງພາລະກິດຂອງພຣະເຈົ້າ ກ່ຽວກັບທູດສະຫວັນ ແລະ ທຸກຄົນ. ຍ້ອນທູດສະຫວັນເປັນຂອງພຣະເຈົ້າ, ໃນມື້ໜຶ່ງພວກເຂົາກໍຈະກາຍເປັນຜູ້ຄົນແຫ່ງອານາຈັກຂອງພຣະເຈົ້າ ແລະ ຈະໄດ້ຮັບການດູແລ ແລະ ການປົກປ້ອງຈາກພຣະເຈົ້າ. ໃນຂະນະດຽວກັນ, ທຸກຄົນຍັງຈະຖືກຈັດຕາມປະເພດ, ວິນຍານຊົ່ວຮ້າຍທັງໝົດຂອງຊາຕານຈະຖືກຂ້ຽນຕີ ແລະ ທຸກຄົນທີ່ບໍ່ມີວິນຍານຈະຖືກປົກຄອງໂດຍບຸດຊາຍ ແລະ ປະຊາຊົນຂອງພຣະເຈົ້າ. ສິ່ງດັ່ງກ່າວແມ່ນແຜນການຂອງພຣະເຈົ້າ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າອີກຄັ້ງວ່າ: "ການມາຂອງມື້ເຮົາເປັນຊ່ວງເວລາແຫ່ງຄວາມຕາຍຂອງມະນຸດແທ້ບໍ? ເຮົາສາມາດທຳລາຍມະນຸດໃນເວລາທີ່ອານາຈັກຂອງເຮົາຖືກສ້າງຂຶ້ນແທ້ບໍ?" ເຖິງແມ່ນວ່າ ສິ່ງເຫຼົ່ານີ້ແມ່ນສອງຄຳຖາມທີ່ງ່າຍ ແຕ່ສິ່ງເຫຼົ່ານີ້ກໍແມ່ນການຈັດແຈງຂອງພຣະເຈົ້າ ສຳລັບຈຸດໝາຍປາຍທາງຂອງມະນຸດຊາດທັງປວງ. ເວລາທີ່ພຣະເຈົ້າມາເຖິງແມ່ນເວລາທີ່ "ຜູ້ຄົນທົ່ວຈັກກະວານຈະຖືກຄຶງໃສ່ໄມ້ກາງແຂນປີ້ນຫົວລົງລຸ່ມ". ນີ້ແມ່ນຈຸດປະສົງທີ່ພຣະເຈົ້າປາກົດຕົວຕໍ່ໜ້າທຸກຄົນ ໂດຍນຳໃຊ້ການຂ້ຽນຕີ ເພື່ອເຮັດໃຫ້ພວກເຂົາຮູ້ຈັກການມີຕົວຕົນຂອງພຣະເຈົ້າ. ຍ້ອນເວລາທີ່ພຣະເຈົ້າລົງມາເທິງແຜ່ນດິນໂລກແມ່ນຍຸກສຸດທ້າຍ ແລະ ເປັນເວລາທີ່ປະເທດຕ່າງໆເທິງແຜ່ນດິນໂລກຢູ່ໃນຄວາມວຸ້ນວາຍທີ່ສຸດຂອງພວກເຂົາ, ດັ່ງນັ້ນ ພຣະເຈົ້າຈຶ່ງເວົ້າວ່າ: "ເມື່ອເຮົາລົງມາເທິງແຜ່ນດິນໂລກ, ມັນຖືກປົກຄຸມດ້ວຍຄວາມມືດ ແລະ ມະນຸດແມ່ນ 'ນອນຫຼັບສະນິດ'". ເພາະສະນັ້ນ ໃນປັດຈຸບັນ ຈຶ່ງມີຄົນພຽງກຳມືທີ່ສາມາດຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດ ໂດຍເກືອບຈະ

ບໍ່ມີໃຜເລີຍ. ຍ້ອນຕອນນີ້ແມ່ນຍຸກສຸດທ້າຍ ຈຶ່ງບໍ່ມີໃຜເຄີຍຮູ້ຈັກພຣະເຈົ້າທີ່ແທ້ຈິງ ແລະ ຜູ້ຄົນແມ່ນມີແຕ່ຄວາມຮູ້ກ່ຽວກັບພຣະເຈົ້າແບບຜິວເຜີນເທົ່ານັ້ນ. ມັນເປັນຍ້ອນສິ່ງນີ້ ຜູ້ຄົນຈຶ່ງດຳລົງຊີວິດໃນທ່າມກາງການທົດລອງຢ່າງເຈັບປວດ. ເວລາທີ່ຜູ້ຄົນອອກຈາກການທົດລອງຍັງແມ່ນເວລາທີ່ພວກເຂົາເລີ່ມຖືກຂ້ຽນຕີ, ມັນແມ່ນເວລາທີ່ພຣະເຈົ້າຈະປາກົດຕົວຕໍ່ໜ້າທຸກຄົນ ເພື່ອວ່າ ພວກເຂົາອາດຈະເຫັນພຣະອົງດ້ວຍຕົວເອງ. ຍ້ອນພຣະເຈົ້າທີ່ບັງເກີດເປັນມະນຸດ ຜູ້ຄົນຈຶ່ງຕົກສູ່ຄວາມຈິບຫາຍ ແລະ ບໍ່ສາມາດປົດປ່ອຍຕົວເອງໄດ້ ເຊິ່ງນີ້ຄືການລົງໂທດຂອງພຣະເຈົ້າຕໍ່ມັງກອນແດງທີ່ຍິ່ງໃຫຍ່ ແລະ ມັນເປັນກົດບັນຍັດແຫ່ງການບໍລິຫານຂອງພຣະອົງ. ເມື່ອຄວາມອົບອຸ່ນຂອງລະດູໃບໄມ້ປົ່ງມາເຖິງ ແລະ ດອກໄມ້ໄດ້ເບັ່ງບານ, ເມື່ອທຸກສິ່ງທີ່ຢູ່ກ້ອງສະຫວັນຖືກປົກຄຸມໄປດ້ວຍສີຂຽວ ແລະ ທຸກສິ່ງເທິງແຜ່ນດິນໂລກຖືກຈັດແຈງ, ທຸກຄົນ ແລະ ທຸກສິ່ງກໍຈະເຂົ້າສູ່ການຂ້ຽນຕີຂອງພຣະເຈົ້າເທື່ອລະໜ້ອຍ ແລະ ໃນເວລານັ້ນ ພາລະກິດທັງໝົດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກກໍຈະສິ້ນສຸດລົງ. ພຣະເຈົ້າຈະບໍ່ເຮັດພາລະກິດ ຫຼື ອາໄສຢູ່ແຜ່ນດິນໂລກອີກຕໍ່ໄປ ເນື່ອງຈາກວ່າ ພາລະກິດທີ່ຍິ່ງໃຫຍ່ຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດແລ້ວ. ຜູ້ຄົນຈະບໍ່ສາມາດປະວາງເນື້ອໜັງຂອງພວກເຂົາໃນໄລຍະເວລາອັນສັ້ນໆນີ້ບໍ? ສິ່ງຫຍັງສາມາດຕັດຄວາມຮັກລະຫວ່າງມະນຸດ ແລະ ພຣະເຈົ້າໄດ້? ແມ່ນໃຜສາມາດແຍກຄວາມຮັກລະຫວ່າງມະນຸດ ແລະ ພຣະເຈົ້າ? ແມ່ນພໍ່ແມ່, ຜົວ, ເອື້ອຍນ້ອງ, ເມຍ ຫຼື ການທົດລອງທີ່ເຈັບປວດບໍ? ຄວາມຮູ້ສຶກກ່ຽວກັບສາມັນສຳນຶກສາມາດລຶບຮູບພາບຂອງພຣະເຈົ້າທີ່ຢູ່ພາຍໃນມະນຸດໄດ້ບໍ? ຄວາມເປັນໜີ້ບຸນຄຸນຂອງຜູ້ຄົນ ແລະ ການປະຕິບັດຕໍ່ກັນ ແລະ ກັນແມ່ນການກະທຳຂອງພວກເຂົາເອງບໍ? ມະນຸດສາມາດແກ້ໄຂສິ່ງເຫຼົ່ານັ້ນໄດ້ບໍ? ແມ່ນໃຜສາມາດປົກປ້ອງຕົວເອງໄດ້ແດ່? ຜູ້ຄົນສາມາດສະໜອງໃຫ້ແກ່ຕົວເອງໄດ້ບໍ? ແມ່ນໃຜແມ່ນຜູ້ທີ່ເຂັ້ມແຂງໃນຊີວິດ? ແມ່ນໃຜສາມາດອອກຈາກເຮົາ ແລະ ດຳລົງຊີວິດດ້ວຍຕົວພວກເຂົາເອງແດ່? ເປັນຫຍັງພຣະເຈົ້າຈຶ່ງຂໍໃຫ້ທຸກຄົນປະຕິບັດພາລະກິດໃນການໄຕ່ຕອງຕົວເອງຊໍ້າແລ້ວຊໍ້າອີກ? ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ: "ມີໃຜທີ່ສາມາດຈັດແຈງຄວາມຍາກລຳບາກດ້ວຍມືຂອງພວກເຂົາເອງໄດ້ແດ່?"

ໃນປັດຈຸບັນ ແມ່ນມີຄໍ່າຄືນທີ່ມືດໄປທົ່ວຈັກກະວານ ແລະ ຜູ້ຄົນແມ່ນມຶນຊາ ແລະ ໂງ່ຈ້າ ແຕ່ເຂັມໂມງແມ່ນເໜັງໄປໜ້າສະເໝີ, ນາທີ ແລະ ວິນາທີບໍ່ໄດ້ຢຸດຢັ້ງ ແລະ ການປ່ຽນແປງຂອງແຜ່ນດິນໂລກ, ດວງຕາເວັນ ແລະ ເດືອນກໍໄວຂຶ້ນ. ໃນຄວາມຮູ້ສຶກຂອງພວກເຂົາ, ຜູ້ຄົນເຊື່ອວ່າ ມື້ນັ້ນແມ່ນບໍ່ໄດ້ຫ່າງໄກເລີຍ ຄືກັບວ່າ ມື້ສຸດທ້າຍຂອງພວກເຂົາແມ່ນຢູ່ຕໍ່ໜ້າພວກເຂົາ. ຜູ້ຄົນກະກຽມທຸກສິ່ງໂດຍບໍ່ຢຸດຢັ້ງເພື່ອເວລາຕາຍຂອງພວກເຂົາເອງ ເພື່ອວ່າ ມັນຈະເຮັດໜ້າທີ່ຕາມຈຸດປະສົງຂອງການຕາຍຂອງພວກເຂົາ; ຖ້າບໍ່ດັ່ງນັ້ນ, ພວກເຂົາກໍຈະມີຊີວິດໂດຍບໍ່ມີປະໂຫຍດ ແລະ ນັ້ນຈະບໍ່ໜ້າເສຍດາຍບໍ? ເມື່ອພຣະເຈົ້າທຳລາຍລ້າງໂລກ ພຣະອົງຈະເລີ່ມປ່ຽນແປງວຽກງານພາຍໃນຂອງປະເທດຕ່າງໆ ເຊິ່ງເຮັດໃຫ້ເກີດມີລັດຖະປະຫານ; ສະນັ້ນ, ພຣະເຈົ້າຈຶ່ງລະດົມການຮັບໃຊ້ຈາກຜູ້ຄົນທົ່ວຈັກກະວານ. ດິນແດນທີ່ມັງກອນແດງທີ່ຍິ່ງໃຫຍ່ນອນກ້ຽວຢູ່ຄືເຂດທົດລອງ. ຍ້ອນວ່າ ທາງພາຍໃນແມ່ນຖືກທຳລາຍ ວຽກງານພາຍໃນຂອງມັນຖືກໂຍນເຂົ້າສູ່ຄວາມສັບສົນວຸ້ນວາຍ, ທຸກຄົນເຮັດວຽກງານປ້ອງກັນ

ຕົວເອງ, ຕຽມການເພື່ອຫຼົບໜີໄປຢູ່ດວງເດືອນ ແຕ່ພວກເຂົາຈະສາມາດຫຼົບໜີຈາກການຄວບຄຸມຂອງມືຂອງພຣະເຈົ້າໄດ້ແນວໃດ? ດັ່ງທີ່ພຣະເຈົ້າໄດ້ກ່າວວ່າຜູ້ຄົນຈະ "ດື່ມໄດ້ແຕ່ຈາກຈອກທີ່ຂົມຂື່ນຂອງພວກເຂົາ". ເວລາແຫ່ງການຕໍ່ສູ້ກັນພາຍໃນ ແມ່ນເວລາທີ່ພຣະເຈົ້າອອກຈາກແຜ່ນດິນໂລກຢ່າງແນ່ນອນ; ພຣະເຈົ້າຈະບໍ່ສືບຕໍ່ຢູ່ໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ຈະເຮັດພາລະກິດຂອງພຣະອົງຢູ່ເທິງແຜ່ນດິນໂລກໃຫ້ສິ້ນສຸດທັນທີ. ສາມາດເວົ້າໄດ້ວ່າ ເວລາໄດ້ຜ່ານໄປໄວຫຼາຍ ແລະ ບໍ່ມີຫຍັງຫຼາຍທີ່ເຫຼືອຢູ່. ຈາກນໍ້າສຽງຂອງພຣະທຳຂອງພຣະເຈົ້າ ແມ່ນສາມາດເຫັນໄດ້ວ່າ ພຣະເຈົ້າໄດ້ເວົ້າກ່ຽວກັບຈຸດໝາຍປາຍທາງຂອງທຸກຄົນທົ່ວຈັກກະວານແລ້ວ ແລະ ພຣະອົງບໍ່ມີຫຍັງເຫຼືອທີ່ຈະເວົ້າອີກ. ນີ້ແມ່ນສິ່ງທີ່ພຣະເຈົ້າເປີດເຜີຍຕໍ່ມະນຸດ. ມັນເປັນຍ້ອນເປົ້າໝາຍຂອງພຣະເຈົ້າຄືການສ້າງມະນຸດ ພຣະອົງຈຶ່ງເວົ້າວ່າ: "ໃນສາຍຕາຂອງເຮົາ, ມະນຸດເປັນຜູ້ປົກຄອງເໜືອສັບພະສິ່ງທັງປວງ. ເຮົາມອບສິດອຳນາດຢ່າງໃຫຍ່ຫຼວງໃຫ້ກັບເຂົາ ເຊິ່ງເຮັດໃຫ້ເຂົາສາມາດຈັດການກັບສັບພະທຸກສິ່ງເທິງແຜ່ນດິນໂລກ: ໃບຫຍ້າທີ່ຢູ່ເທິງພູເຂົາ, ສັດຕ່າງໆທີ່ຢູ່ທ່າມກາງປ່າໄມ້ ແລະ ປາທີ່ຢູ່ໃນນໍ້າ". ເມື່ອພຣະເຈົ້າສ້າງມະນຸດ ພຣະອົງໄດ້ກຳນົດລ່ວງໜ້າວ່າ ມະນຸດຈະເປັນນາຍຂອງທຸກສິ່ງ ແຕ່ມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ດ້ວຍເຫດນັ້ນ ເຂົາຈຶ່ງບໍ່ສາມາດດຳລົງຊີວິດຕາມທີ່ເຂົາປາດຖະໜາ. ນີ້ໄດ້ນຳມາສູ່ໂລກແຫ່ງປັດຈຸບັນ ເຊິ່ງຜູ້ຄົນແມ່ນບໍ່ແຕກຕ່າງຈາກສັດຮ້າຍ ແລະ ພູເຂົາໄດ້ປະປົນກັບແມ່ນໍ້າ ເຊິ່ງຜົນໄດ້ຮັບກໍຄື: "ຊົ່ວຊີວິດຂອງເຂົາແມ່ນຊີວິດແຫ່ງຄວາມທຸກທໍລະມານ, ຄວາມດີ້ນຮົນ ແລະ ຄວາມສຸກທີ່ຖືກເພີ່ມເຂົ້າກັບຄວາມວ່າງເປົ່າ". ຍ້ອນບໍ່ມີຄວາມໝາຍຕໍ່ຊີວິດຂອງມະນຸດ ແລະ ຍ້ອນວ່າ ນີ້ບໍ່ແມ່ນເປົ້າໝາຍຂອງພຣະເຈົ້າໃນການສ້າງມະນຸດ ໂລກທັງໝົດຈຶ່ງໄດ້ວຸ້ນວາຍ. ເມື່ອພຣະເຈົ້າຈັດລະບຽບໃຫ້ແກ່ຈັກກະວານທັງໝົດ ທຸກຄົນກໍຈະເລີ່ມປະສົບກັບຊີວິດມະນຸດຢ່າງເປັນທາງການ ແລະ ພຽງເມື່ອນັ້ນຊີວິດຂອງພວກເຂົາຈຶ່ງຈະເລີ່ມມີຄວາມໝາຍ. ຜູ້ຄົນຈະເລີ່ມໃຊ້ອຳນາດທີ່ພຣະເຈົ້າໄດ້ມອບໃຫ້ແກ່ພວກເຂົາ, ພວກເຂົາຈະປາກົດຢ່າງເປັນທາງການຢູ່ຕໍ່ໜ້າທຸກສິ່ງໃນຖານະນາຍຂອງສິ່ງເຫຼົ່ານັ້ນ ແລະ ພວກເຂົາຈະຍອມຮັບການນຳພາຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ແລະ ຈະບໍ່ຂັດຂືນພຣະເຈົ້າອີກຕໍ່ໄປ ແຕ່ຈະເຊື່ອຟັງພຣະອົງ. ຢ່າງໃດກໍຕາມ, ຜູ້ຄົນໃນປັດຈຸບັນແມ່ນຫ່າງໄກຈາກສິ່ງນັ້ນຫຼາຍ. ສິ່ງດຽວທີ່ພວກເຂົາເຮັດແມ່ນ "ເອົາເງິນໃສ່ກະເປົ໋າຕົວເອງ" ຜ່ານພຣະເຈົ້າ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງຖາມຄຳຖາມຕ່າງໆເຊັ່ນ: "ພາລະກິດທີ່ເຮົາປະຕິບັດໃນມະນຸດບໍ່ໄດ້ມີຜົນປະໂຫຍດຫຍັງກັບເຂົາເລີຍບໍ?" ຖ້າພຣະເຈົ້າບໍ່ຖາມຄຳຖາມເຫຼົ່ານີ້ ກໍຈະບໍ່ມີຫຍັງເກີດຂຶ້ນ; ແຕ່ເມື່ອພຣະອົງຖາມສິ່ງດັ່ງກ່າວບາງຄົນກໍບໍ່ສາມາດຢືນຢ່າງໝັ້ນຄົງໄດ້ ເນື່ອງຈາກມີໜີ້ບຸນຄຸນໃນສາມັນສຳນຶກຂອງພວກເຂົາ ແລະ ພວກເຂົາບໍ່ແມ່ນເພື່ອພຣະເຈົ້າທັງໝົດ, ແຕ່ເພື່ອພວກເຂົາເອງ. ທຸກສິ່ງແມ່ນເປົ່າວ່າງ; ສະນັ້ນ, ຜູ້ຄົນເຫຼົ່ານີ້ ແລະ "ຜູ້ຄົນໃນທຸກສາສະໜາ, ທຸກສັງຄົມ, ທຸກຊາດ ແລະ ທຸກນິກາຍລ້ວນແລ້ວແຕ່ຮູ້ເຖິງຄວາມວ່າງເປົ່າທີ່ຢູ່ເທິງແຜ່ນດິນໂລກ ແລະ ພວກເຂົາລ້ວນແລ້ວແຕ່ສະແຫວງຫາເຮົາ ແລະ ລໍຖ້າການກັບມາຂອງເຮົາ". ທຸກຄົນປາດຖະໜາເຖິງການກັບຄືນມາຂອງພຣະເຈົ້າ ເພື່ອວ່າ ພຣະອົງອາດເຮັດໃຫ້ຍຸກເກົ່າທີ່ວ່າງເປົ່າສິ້ນສຸດລົງ ແຕ່ພວກເຂົາກໍຍັງຢ້ານທີ່ຈະຕົກສູ່ຄວາມຈິບຫາຍ. ໂລກສາສະໜາທັງໝົດ

ຈະຖືກປະໃຫ້ໂດດດ່ຽວທັນທີ ແລະ ຖືກລະເລີຍໂດຍທຸກຄົນ; ພວກເຂົາຂາດຄວາມເປັນຈິງ ແລະ ພວກເຂົາຈະຮູ້ວ່າ ຄວາມເຊື່ອຂອງພວກເຂົາໃນຕົວພຣະເຈົ້າແມ່ນເລື່ອນລອຍ ແລະ ເປັນນາມມະທຳ. ຜູ້ຄົນຈາກທຸກວົງສັງຄົມຍັງຈະຖືກກະຈາຍອອກໄປ ແລະ ທຸກຊາດ ແລະ ນິກາຍຈະເລີ່ມຕົກເຂົ້າສູ່ຄວາມວຸ້ນວາຍ. ສະຫຼຸບກໍຄື ຄວາມເປັນປົກກະຕິຂອງທຸກສິ່ງຈະຖືກຈີກອອກເປັນເສດສ່ວນ, ທຸກສິ່ງຈະສູນເສຍຄວາມເປັນປົກກະຕິຂອງມັນ ແລະ ພ້ອມນັ້ນ ຜູ້ຄົນກໍຈະເປີດເຜີຍໃບໜ້າທີ່ແທ້ຈິງຂອງພວກເຂົາເຊັ່ນກັນ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ: "ມີຫຼາຍຄັ້ງທີ່ເຮົາໄດ້ຮ້ອງຫາມະນຸດ, ແຕ່ມີຜູ້ໃດແດ່ທີ່ເຄີຍຮູ້ສຶກເຖິງຄວາມຮັກຂອງເຮົາ? ມີຜູ້ໃດແດ່ທີ່ດຳລົງຊີວິດໃນຄວາມເປັນມະນຸດ? ມະນຸດອາດດຳລົງຊີວິດໃນເນື້ອໜັງ, ແຕ່ເຂົາແມ່ນປາສະຈາກຄວາມເປັນມະນຸດ. ເຂົາເກີດໃນອານາຈັກສັດບໍ?" ການປ່ຽນແປງຍັງຈະເກີດຂຶ້ນໃນທ່າມກາງມະນຸດ ແລະ ຍ້ອນການປ່ຽນແປງນີ້ ແຕ່ລະຄົນຈະຖືກຈັດຕາມປະເພດ. ນີ້ແມ່ນພາລະກິດຂອງພຣະເຈົ້າໃນໄລຍະຍຸກສຸດທ້າຍ ແລະ ແມ່ນຜົນທີ່ຈະຕ້ອງບັນລຸຈາກພາລະກິດແຫ່ງຍຸກສຸດທ້າຍ. ພຣະເຈົ້າກ່າວຢ່າງຊັດເຈນຫຼາຍຂຶ້ນກ່ຽວກັບທາດແທ້ຂອງມະນຸດ ແລະ ດ້ວຍເຫດນັ້ນ ມັນຈຶ່ງພິສູດວ່າ ຈຸດສິ້ນສຸດຂອງພາລະກິດຂອງພຣະອົງແມ່ນໃກ້ເຂົ້າມາແລ້ວ ແລະ ຍິ່ງໄປກວ່ານັ້ນ ພຣະເຈົ້າແມ່ນລີ້ລັບຈາກຜູ້ຄົນຫຼາຍຂຶ້ນ ເຊິ່ງເຮັດໃຫ້ພວກເຂົາຮູ້ສຶກອຶດອັດ. ຍິ່ງຜູ້ຄົນສັງເກດເບິ່ງຄວາມປະສົງຂອງພຣະເຈົ້າໜ້ອຍສໍ່າໃດ ພວກເຂົາກໍຍິ່ງໃຫ້ຄວາມສົນໃຈຕໍ່ພາລະກິດແຫ່ງຍຸກສຸດທ້າຍຂອງພຣະເຈົ້າໜ້ອຍສໍ່ານັ້ນ; ສິ່ງນີ້ຢຸດພວກເຂົາຈາກການລົບກວນ ແລະ ດ້ວຍເຫດນັ້ນ ເມື່ອບໍ່ມີໃຜໃຫ້ຄວາມສົນໃຈ ພຣະເຈົ້າຈຶ່ງເຮັດພາລະກິດທີ່ພຣະອົງເຈດຕະນາທີ່ຈະເຮັດ. ນີ້ແມ່ນໜຶ່ງຫຼັກການຂອງພາລະກິດຂອງພຣະເຈົ້າຕະຫຼອດຍຸກຕ່າງໆ. ຍິ່ງພຣະອົງຄຳນຶງເຖິງຄວາມອ່ອນແອຂອງຜູ້ຄົນໜ້ອຍສໍ່າໃດ ກໍຍິ່ງສະແດງໃຫ້ເຫັນວ່າ ຄວາມເປັນພຣະເຈົ້າຂອງພຣະອົງຊັດເຈນຂຶ້ນ ແລະ ດ້ວຍເຫດນັ້ນ ມື້ຂອງພຣະເຈົ້າກໍຍິ່ງເຂົ້າມາໃກ້ຫຼາຍຂຶ້ນ.

# ບົດທີ 26

ຈາກພຣະທຳທຸກຂໍ້ທີ່ພຣະເຈົ້າກ່າວແມ່ນສາມາດເຫັນໄດ້ວ່າ ມື້ຂອງພຣະເຈົ້າແມ່ນໃກ້ເຂົ້າມາທຸກມື້. ມັນເປັນຄືກັບວ່າ ມື້ນີ້ແມ່ນຢູ່ຕໍ່ໜ້າສາຍຕາຂອງຜູ້ຄົນ ແລະ ເປັນຄືກັບວ່າ ມັນຈະມາຮອດໃນມື້ອື່ນ. ສະນັ້ນ, ຫຼັງຈາກອ່ານພຣະທຳຂອງພຣະເຈົ້າ ທຸກຄົນຈຶ່ງມີຄວາມຢ້ານກົວ ແລະ ພວກເຂົາຍັງຮູ້ສຶກເຖິງສ່ວນໜຶ່ງຂອງຄວາມເປົ່າປ່ຽວຂອງໂລກອີກດ້ວຍ ຄືດັ່ງໃບໄມ້ຫຼົ່ນລົງໃນສາຍລົມ ທີ່ຕາມດ້ວຍສາຍຝົນຄ່ອຍໆ. ຜູ້ຄົນຫາຍໄປໂດຍບໍ່ມີຮ່ອງຮອຍ ຄືກັບວ່າ ພວກເຂົາທຸກຄົນຫາຍສາບສູນໄປຈົນໝົດ. ທຸກຄົນຮູ້ສຶກມີລາງຮ້າຍ ແລະ ເຖິງແມ່ນວ່າທຸກຄົນຈະພະຍາຍາມຢ່າງໜັກ ແລະ ປາຖະໜາທີ່ຈະຕອບສະໜອງຄວາມປະສົງຂອງພຣະເຈົ້າ ແລະ ແຕ່ລະຄົນໃຊ້ກຳລັງທັງໝົດຂອງພວກເຂົາເພື່ອຕອບສະໜອງເຈດຕະນາຂອງພຣະເຈົ້າ ເພື່ອວ່າ ຄວາມປະສົງຂອງພຣະເຈົ້າອາດຈະດຳເນີນໄປຢ່າງລາບລື້ນ ແລະ ປາສະຈາກສິ່ງກີດຂວາງໃດໆ ເຊິ່ງທັດສະນະດັ່ງກ່າວແມ່ນປະປົນກັບຄວາມຮູ້ສຶກສັງຫອນໃຈຕະຫຼອດ. ໃຫ້ເອົາການກ່າວພຣະທຳຂອງມື້ນີ້ເປັນຕົວຢ່າງ: ຖ້າພຣະທຳເຫຼົ່ານີ້ຖືກເຜີຍແຜ່ແກ່ມວນຊົນ ແລະ ຖືກປະກາດຕໍ່ຈັກກະວານທັງໝົດ, ທຸກຄົນກໍຈະກົ້ມລົງ ແລະ ຮ້ອງໄຫ້ ເນື່ອງຈາກໃນພຣະທຳທີ່ວ່າ: "ເຮົາຈະເຝົ້າເບິ່ງທົ່ວແຜ່ນດິນໂລກ ແລະ ປາກົດຢູ່ທາງພາກຕາເວັນອອກຂອງໂລກດ້ວຍຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ, ຄວາມພິໂລດ ແລະ ການຂ້ຽນຕີ ເຮົາຈະເປີດເຜີຍຕົວເອງຕໍ່ມະນຸດທັງຫຼາຍທີ່ນັບບໍ່ຖ້ວນ!" ທຸກຄົນທີ່ເຂົ້າໃຈເລື່ອງທາງວິນຍານເຫັນວ່າ ບໍ່ມີຜູ້ໃດທີ່ຈະສາມາດໜີຈາກການຂ້ຽນຕີຂອງພຣະເຈົ້າໄດ້ ແລະ ພາຍຫຼັງທີ່ປະສົບກັບຄວາມທຸກຈາກການຂ້ຽນຕີ ທຸກຄົນກໍຈະຖືກແຍກອອກຕາມປະເພດຂອງພວກເຂົາ. ແທ້ຈິງແລ້ວ ນີ້ແມ່ນຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ແລະ ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້. ເມື່ອພຣະເຈົ້າສ້າງໂລກ ແລະ ເມື່ອພຣະອົງນຳພາມະນຸດ ພຣະອົງໄດ້ສະແດງໃຫ້ເຫັນເຖິງສະຕິປັນຍາ ແລະ ຄວາມມະຫັດສະຈັນຂອງພຣະອົງ ແລະ ເມື່ອພຣະອົງນຳຍຸກນີ້ໄປສູ່ການສິ້ນສຸດເທົ່ານັ້ນ ຜູ້ຄົນຈຶ່ງຈະເຫັນຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ, ຄວາມໂກດຮ້າຍ ແລະ ການຂ້ຽນຕີຢ່າງແທ້ຈິງຂອງພຣະອົງ. ຍິ່ງໄປກວ່ານັ້ນ, ຜ່ານການຂ້ຽນຕີເທົ່ານັ້ນ ພວກເຂົາຈຶ່ງຈະສາມາດເຫັນຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ ແລະ ຄວາມໂກດຮ້າຍຂອງພຣະອົງ; ນີ້ແມ່ນເສັ້ນທາງທີ່ຕ້ອງໄດ້ຍ່າງຕາມ, ດັ່ງໃນຍຸກສຸດທ້າຍ, ການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນມີຄວາມຈຳເປັນ ແລະ ຂາດບໍ່ໄດ້. ຫຼັງຈາກທີ່ໄດ້ປະກາດເຖິງການສິ້ນສຸດຂອງມະນຸດຊາດທັງປວງ ພຣະເຈົ້າກໍສະແດງໃຫ້ມະນຸດເຫັນພາລະກິດທີ່ພຣະອົງປະຕິບັດໃນປັດຈຸບັນ. ຍົກຕົວຢ່າງ ພຣະເຈົ້າກ່າວວ່າ: "ອິດສະຣາເອນໃນອະດີດບໍ່ໄດ້ມີຢູ່ອີກແລ້ວ ແລະ ອິດສະຣາເອນໃນປັດຈຸບັນໄດ້ລຸກຂຶ້ນ, ຕັ້ງຂຶ້ນ ແລະ ສູງຂຶ້ນຫຼາຍໃນໂລກ ແລະ ໄດ້ຢືນຂຶ້ນໃນໃຈຂອງມະນຸດທຸກຄົນ. ອິດສະຣາເອນໃນປັດຈຸບັນຈະໄດ້ຮັບແຫຼ່ງທີ່ມາຂອງການມີຊີວິດຜ່ານປະຊາຊົນຂອງເຮົາຢ່າງແນ່ນອນ!" "ໂອ, ເອຢິບທີ່ເປັນຕາກຽດຊັງເອີຍ! ... ເຈົ້າຈະບໍ່ຢູ່ພາຍໃນການຂ້ຽນຕີຂອງເຮົາໄດ້ແນວໃດ?" ພຣະເຈົ້າເຈດຕະນາທີ່ຈະສະແດງໃຫ້ຜູ້ຄົນເຫັນເຖິງຜົນຕາມມາຂອງສອງປະເທດທີ່ແຕກຕ່າງກັນໄດ້ມາພົບກັນໃນມືຂອງພຣະອົງ

ເຊິ່ງໃນດ້ານໜຶ່ງແມ່ນໝາຍເຖິງອິດສະຣາເອນ ທີ່ເປັນວັດຖຸ ແລະ ໃນອີກດ້ານແມ່ນໝາຍເຖິງທຸກຄົນທີ່ຖືກພຣະເຈົ້າເລືອກ ເຊິ່ງເວົ້າໄດ້ວ່າ ຄົນທີ່ຖືກພຣະເຈົ້າເລືອກຈະປ່ຽນແປງແນວໃດ ເມື່ອອິດສະຣາເອນປ່ຽນ. ເມື່ອອິດສະຣາເອນໄດ້ກັບຄືນສູ່ຮູບຮ່າງດັ່ງເດີມທັງໝົດ, ຜູ້ທີ່ຖືກເລືອກທັງໝົດສຸດທ້າຍ ກໍຈະຖືກເຮັດໃຫ້ສົມບູນ ເຊິ່ງເວົ້າໄດ້ວ່າ ອິດສະຣາເອນແມ່ນສັນຍາລັກທີ່ສຳຄັນຂອງຜູ້ທີ່ພຣະເຈົ້າຮັກ. ໃນຂະນະດຽວກັນ ເອຢິບແມ່ນຈຸດສູນລວມຂອງຕົວແທນຂອງຜູ້ທີ່ພຣະເຈົ້າກຽດຊັງ. ຍິ່ງມັນເສື່ອມໂຊມສໍ່າໃດ ຜູ້ທີ່ພຣະເຈົ້າກຽດຊັງກໍຍິ່ງເສື່ອມຊາມຫຼາຍສໍ່ານັ້ນ ແລະ ສຸດທ້າຍ ບາບີໂລນກໍຈະຫຼົ້ມຈົມ. ນີ້ເຮັດໃຫ້ເຫັນເຖິງຄວາມແຕກຕ່າງຢ່າງຊັດເຈນ. ໃນການປະກາດການສິ້ນສຸດຂອງອິດສະຣາເອນ ແລະ ເອຢິບ, ພຣະເຈົ້າແມ່ນເປີດເຜີຍປາຍທາງຂອງທຸກຄົນ; ສະນັ້ນ ເມື່ອກ່າວເຖິງອິດສະຣາເອນ ພຣະເຈົ້າຈຶ່ງກ່າວເຖິງເອຢິບເຊັ່ນກັນ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ມື້ແຫ່ງການທຳລາຍເອຢິບແມ່ນມື້ແຫ່ງການທຳລາຍລ້າງໂລກ ເຊິ່ງເປັນມື້ທີ່ພຣະເຈົ້າຂ້ຽນຕີທຸກຄົນ. ສິ່ງນີ້ຈະເກີດຂຶ້ນໃນໄວໆນີ້; ພຣະເຈົ້າກຳລັງຈະປະຕິບັດສິ່ງນີ້ສຳເລັດ ເຊິ່ງເປັນສິ່ງທີ່ຂ້ອນຂ້າງຈະແນມບໍ່ເຫັນດ້ວຍຕາເປົ່າຂອງມະນຸດ ແຕ່ກໍຂາດບໍ່ໄດ້ ແລະ ປ່ຽນແປງບໍ່ໄດ້. ພຣະເຈົ້າກ່າວວ່າ: "ທຸກຄົນທີ່ຢືນຕໍ່ສູ້ກັບເຮົາຈະຖືກເຮົາຂ້ຽນຕີຕະຫຼອດການະນານຢ່າງແນ່ນອນ. ເພາະວ່າເຮົາເປັນພຣະເຈົ້າທີ່ຫວງແຫນ ແລະ ຈະບໍ່ລະປ່ອຍມະນຸດໄປງ່າຍໆສຳລັບທຸກສິ່ງທີ່ພວກເຂົາໄດ້ກະທຳ". ເປັນຫຍັງພຣະເຈົ້າຈຶ່ງກ່າວດ້ວຍຄຳເວົ້າທີ່ເດັດຂາດ? ເປັນຫຍັງພຣະອົງຈຶ່ງກາຍເປັນເນື້ອໜັງດ້ວຍຕົວເອງໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່? ຈາກພຣະທຳຂອງພຣະເຈົ້າແມ່ນສາມາດເຫັນເປົ້າໝາຍຂອງພຣະອົງ: ພຣະອົງບໍ່ໄດ້ມາຊ່ວຍຜູ້ຄົນ ຫຼື ເພື່ອສະແດງຄວາມຮັກຕໍ່ພວກເຂົາ ຫຼື ເບິ່ງແຍງພວກເຂົາ ຫຼື ປົກປ້ອງພວກເຂົາ. ພຣະອົງມາເພື່ອຂ້ຽນຕີທຸກຄົນທີ່ຕໍ່ຕ້ານພຣະອົງ. ເພາະພຣະເຈົ້າກ່າວວ່າ: "ບໍ່ມີໃຜສາມາດໜີພົ້ນຈາກການຂ້ຽນຕີຂອງເຮົາໄດ້". ພຣະເຈົ້າດຳລົງຊີວິດໃນເນື້ອໜັງ ແລະ ຍິ່ງໄປກວ່ານັ້ນ ພຣະອົງແມ່ນຄົນທຳມະດາ ແຕ່ພຣະອົງບໍ່ໃຫ້ອະໄພຜູ້ຄົນ ເນື່ອງຈາກຄວາມອ່ອນແອຂອງພວກເຂົາໃນການທີ່ບໍ່ສາມາດຮູ້ຈັກພຣະອົງຢ່າງເປັນການສ່ວນຕົວ; ກົງກັນຂ້າມ, ພຣະອົງປະນາມມະນຸດຍ້ອນຄວາມຜິດບາບຂອງພວກເຂົາໂດຍໃຊ້ "ບຸກຄົນທຳມະດາ", ພຣະອົງເຮັດໃຫ້ທຸກຄົນທີ່ເຫັນເນື້ອໜັງຂອງພຣະອົງເປັນຜູ້ທີ່ຖືກຂ້ຽນຕີ ແລະ ດ້ວຍເຫດນັ້ນ ພວກເຂົາກໍກາຍເປັນສິ່ງສັງເວີຍສຳລັບທຸກຄົນທີ່ບໍ່ແມ່ນປະຊາຊົນຂອງປະເທດຂອງມັງກອນແດງທີ່ຍິ່ງໃຫຍ່. ແຕ່ນີ້ບໍ່ແມ່ນໜຶ່ງໃນບັນດາເປົ້າໝາຍຫຼັກຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ຫຼັກໆແລ້ວ ພຣະເຈົ້າກາຍເປັນເນື້ອໜັງເພື່ອຕໍ່ສູ້ກັບມັງກອນແດງຜູ້ຍິ່ງໃຫຍ່ໂດຍຢູ່ໃນເນື້ອໜັງ ແລະ ເພື່ອນຳເອົາຄວາມອັບອາຍມາສູ່ມັນຜ່ານການຕໍ່ສູ້ນີ້. ຍ້ອນອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າມີຄວາມຊັດເຈນຈາກການຕໍ່ສູ້ກັບມັງກອນແດງຜູ້ຍິ່ງໃຫຍ່ຢູ່ໃນເນື້ອໜັງຫຼາຍກວ່າຢູ່ໃນພຣະວິນຍານ, ພຣະເຈົ້າຈຶ່ງຕໍ່ສູ້ໃນເນື້ອໜັງເພື່ອສະແດງໃຫ້ເຫັນເຖິງການກະທຳ ແລະ ອຳນາດອັນຍິ່ງໃຫຍ່ຂອງພຣະອົງ. ຜູ້ຄົນຈຳນວນນັບບໍ່ຖ້ວນຖືກປະນາມ "ຢ່າງບໍ່ມີຄວາມຜິດ" ໂດຍການບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຳນວນນັບບໍ່ຖ້ວນກໍຖືກໂຍນລົງນະຣົກ ແລະ ໂຍນເຂົ້າສູ່ການຂ້ຽນຕີ ແລະ ທົນທຸກຢູ່ໃນເນື້ອໜັງ. ນີ້ແມ່ນການສະແດງໃຫ້ເຫັນເຖິງອຸປະນິໄສອັນ

ຊອບທຳຂອງພຣະເຈົ້າ ແລະ ບໍ່ວ່າຜູ້ຄົນເຫຼົ່ານັ້ນທີ່ຕໍ່ຕ້ານພຣະເຈົ້າຈະປ່ຽນແປງແນວໃດກໍຕາມໃນປັດຈຸບັນ, ອຸປະນິໄສທີ່ຖືກຕ້ອງຂອງພຣະເຈົ້າຈະບໍ່ມີວັນປ່ຽນແປງ. ເມື່ອຖືກປະນາມແລ້ວ ຜູ້ຄົນກໍຈະຖືກປະນາມຕະຫຼອດການ ໂດຍທີ່ບໍ່ມີວັນສາມາດລຸກຂຶ້ນໄດ້ອີກ. ອຸປະນິໄສຂອງມະນຸດບໍ່ສາມາດເປັນຄືກັບອຸປະນິໄສຂອງພຣະເຈົ້າ. ຕໍ່ຜູ້ຄົນທີ່ຕໍ່ຕ້ານພຣະເຈົ້າ ຜູ້ຄົນເປັນຮ້ອນ ແລະ ໜາວ; ພວກເຂົາແກວ່ງຊ້າຍແກວ່ງຂວາ, ບິດໜຶ່ງຂຶ້ນ, ບິດໜຶ່ງລົງ; ພວກເຂົາບໍ່ສາມາດຕັ້ງໝັ້ນໄດ້ ໂດຍບາງຄັ້ງກໍກຽດຊັງຜູ້ທີ່ຕໍ່ຕ້ານພຣະເຈົ້າຈົນເຂົ້າກະດູກດຳຂອງພວກເຂົາ ແລະ ບາງຄັ້ງກໍກອດຄົນເຫຼົ່ານັ້ນຢູ່ໃກ້ໆ. ສະຖານະການໃນປັດຈຸບັນໄດ້ເກີດຂຶ້ນ ຍ້ອນຜູ້ຄົນບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ. ເປັນຫຍັງພຣະເຈົ້າຈຶ່ງກ່າວວ່າ: "ບໍ່ວ່າຢ່າງໃດກໍຕາມ ທູດສະຫວັນກໍແມ່ນທູດສະຫວັນ; ບໍ່ວ່າຢ່າງໃດກໍຕາມ ພຣະເຈົ້າກໍແມ່ນພຣະເຈົ້າ; ບໍ່ວ່າຢ່າງໃດກໍຕາມ ຜີສາດກໍແມ່ນຜີສາດ; ຜູ້ທີ່ບໍ່ຊອບທຳກໍຍັງແມ່ນຜູ້ທີ່ບໍ່ຊອບທຳ; ແລະ ຜູ້ບໍລິສຸດກໍຍັງແມ່ນຜູ້ບໍລິສຸດ"? ພວກເຈົ້າບໍ່ສາມາດເຂົ້າໃຈສິ່ງນີ້ບໍ? ພຣະເຈົ້າສາມາດຈື່ຜິດໄດ້ບໍ? ສະນັ້ນ, ພຣະເຈົ້າຈຶ່ງກ່າວວ່າ: "ແຕ່ລະຄົນຖືກແຍກອອກຕາມປະເພດຂອງພວກເຂົາ ແລະ ຊອກຫາທາງຂອງພວກເຂົາກັບຄືນສູ່ອ້ອມກອດຂອງຄອບຄົວຂອງພວກເຂົາໂດຍທີ່ບໍ່ຮູ້ຕົວ". ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ໃນປັດຈຸບັນ ພຣະເຈົ້າໄດ້ຈຳແນກທຸກສິ່ງເປັນປະເພດຂອງພວກມັນແລ້ວ ເພື່ອວ່າມັນຈະບໍ່ແມ່ນ "ໂລກທີ່ບໍ່ມີຂອບເຂດ" ອີກຕໍ່ໄປ ແລະ ຜູ້ຄົນຈະບໍ່ກິນຈາກໝໍ້ໃຫຍ່ໃບດຽວອີກຕໍ່ໄປ ແຕ່ຈະປະຕິບັດໜ້າທີ່ຂອງພວກເຂົາໃນເຮືອນຂອງຕົວເອງ ໂດຍທີ່ຫຼິ້ນບົດບາດຂອງພວກເຂົາເອງ. ນີ້ແມ່ນແຜນດັ້ງເດີມຂອງພຣະເຈົ້າໃນເວລາສ້າງໂລກ; ຫຼັງຈາກຖືກແຍກອອກຕາມປະເພດ ຜູ້ຄົນ "ແຕ່ລະຄົນຈະກິນອາຫານຂອງຕົວເອງ" ເຊິ່ງໝາຍຄວາມວ່າ ພຣະເຈົ້າຈະເລີ່ມການພິພາກສາ. ດ້ວຍເຫດນັ້ນ ພຣະທຳເຫຼົ່ານີ້ຈຶ່ງອອກມາຈາກປາກຂອງພຣະເຈົ້າ: "ເຮົາຈະຟື້ນຟູສະພາບດັ້ງເດີມຂອງສັບພະສິ່ງ; ເຮົາຈະຟື້ນຟູທຸກສິ່ງໃຫ້ກັບຄືນສູ່ຮູບແບບທີ່ເປັນຢູ່ດັ້ງເດີມ, ປ່ຽນແປງທຸກສິ່ງຢ່າງເລິກເຊິ່ງ, ເພື່ອວ່າທຸກສິ່ງຈະກັບຄືນສູ່ອ້ອມກອດໃນແຜນການຂອງເຮົາ". ແນ່ນອນຢູ່ແລ້ວວ່າ ນີ້ແມ່ນເປົ້າໝາຍຂອງພາລະກິດທັງໝົດຂອງພຣະເຈົ້າ ແລະ ມັນກໍບໍ່ຍາກທີ່ຈະເຂົ້າໃຈ. ພຣະເຈົ້າຈະປະຕິບັດພາລະກິດຂອງພຣະອົງໃຫ້ສຳເລັດ ແລ້ວມະນຸດສາມາດຢືນຂວາງທາງຂອງພາລະກິດຂອງພຣະອົງໄດ້ບໍ? ພຣະເຈົ້າສາມາດຈີກສັນຍາທີ່ສ້າງຂຶ້ນລະຫວ່າງພຣະອົງ ແລະ ມະນຸດໄດ້ບໍ? ຜູ້ໃດສາມາດປ່ຽນແປງສິ່ງທີ່ພຣະວິນຍານຂອງພຣະເຈົ້າໄດ້ປະຕິບັດບໍ? ມະນຸດໃດໜຶ່ງສາມາດເຮັດເຊັ່ນນັ້ນໄດ້ບໍ?

ໃນອະດີດ ຜູ້ຄົນເຂົ້າໃຈກົດເກນໃນພຣະທຳຂອງພຣະເຈົ້າ: ເມື່ອມີການກ່າວພຣະທຳຂອງພຣະເຈົ້າ ພຣະທຳເຫຼົ່ານັ້ນກໍຖືກເຮັດໃຫ້ເປັນຈິງຢ່າງໄວວາ. ບໍ່ມີຜິດໃນສິ່ງນີ້. ໃນເມື່ອພຣະເຈົ້າໄດ້ກ່າວວ່າ ພຣະອົງຈະຂ້ຽນຕີທຸກຄົນ ແລະ ຍິ່ງໄປກວ່ານັ້ນ ໃນເມື່ອພຣະອົງໄດ້ອອກກົດບັນຍັດແຫ່ງການບໍລິຫານຂອງພຣະອົງ ຈຶ່ງສາມາດເຫັນໄດ້ວ່າ ພາລະກິດຂອງພຣະເຈົ້າໄດ້ຖືກປະຕິບັດເຖິງຂັ້ນຕອນໃດໜຶ່ງແລ້ວ. ກົດບັນຍັດທີ່ໄດ້ວາງອອກກັບທຸກຄົນແມ່ນກ່າວເຖິງຊີວິດຂອງພວກເຂົາ ແລະ ທັດສະນະຄະຕິຂອງພວກເຂົາທີ່ມີຕໍ່ພຣະເຈົ້າ. ສິ່ງນີ້ບໍ່ໄດ້ເຂົ້າເຖິງຕົ້ນຕໍ; ສິ່ງນີ້ບໍ່ໄດ້ກ່າວວ່າ ມີການອີງໃສ່ການກຳນົດລ່ວງໜ້າຂອງພຣະເຈົ້າ ແຕ່ອີງໃສ່ພຶດຕິກຳຂອງມະນຸດໃນເວລານັ້ນ. ກົດບັນຍັດແຫ່ງການບໍລິຫານ

ຂອງປັດຈຸບັນແມ່ນພິເສດ ແລະ ສິ່ງເຫຼົ່ານັ້ນກ່າວເຖິງວິທີທີ່ "ທຸກຄົນຈະຖືກແຍກອອກຕາມປະເພດຂອງພວກເຂົາເອງ ແລະ ຈະໄດ້ຮັບການຂ້ຽນຕີທີ່ເໝາະສົມກັບການກະທຳຂອງພວກເຂົາ". ຖ້າບໍ່ມີການອ່ານຢ່າງຕັ້ງໃຈກໍຈະບໍ່ສາມາດຊອກເຫັນບັນຫາໃນສິ່ງນີ້. ຍ້ອນໃນຊ່ວງຍຸກສຸດທ້າຍເທົ່ານັ້ນທີ່ພຣະເຈົ້າແຍກທຸກສິ່ງຕາມປະເພດຂອງພວກມັນ ເຊິ່ງພາຍຫຼັງທີ່ໄດ້ອ່ານສິ່ງນີ້ ຄົນສ່ວນໃຫຍ່ກໍຍັງງົງ ແລະ ສັບສົນ; ພວກເຂົາຍັງມີທັດສະນະຄະຕິທີ່ບໍ່ກະຕືລືລົ້ນ ໂດຍບໍ່ເຫັນຄວາມຮີບດ່ວນຂອງເວລາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ໄດ້ເອົາສິ່ງນີ້ເປັນການຕັກເຕືອນ. ໃນຈຸດນີ້ ເປັນຫຍັງກົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າ ເຊິ່ງຖືກປະກາດຕໍ່ຈັກກະວານທັງໝົດຈຶ່ງຖືກນຳສະແດງອອກຕໍ່ມະນຸດ? ຜູ້ຄົນເຫຼົ່ານີ້ເປັນຕົວແທນຂອງທຸກສິ່ງທົ່ວຈັກກະວານບໍ? ໃນທີ່ສຸດ ພຣະເຈົ້າສາມາດມີຄວາມເມດຕາຕໍ່ຜູ້ຄົນເຫຼົ່ານີ້ຫຼາຍຂຶ້ນບໍ? ຜູ້ຄົນເຫຼົ່ານີ້ມີສອງຫົວບໍ? ເມື່ອພຣະເຈົ້າຂ້ຽນຕີຜູ້ຄົນທົ່ວຈັກກະວານທັງປວງ ແລະ ເມື່ອຄວາມຫາຍະນະທຸກຮູບແບບໂຈມຕີ, ການປ່ຽນແປງກໍຈະເກີດຂຶ້ນໃນດວງຕາເວັນ ແລະ ດວງເດືອນ ເນື່ອງຈາກຄວາມຫາຍະນະເຫຼົ່ານີ້ ແລະ ເມື່ອຄວາມຫາຍະນະເຫຼົ່ານີ້ສິ້ນສຸດລົງ ດວງຕາເວັນ ແລະ ດວງເດືອນກໍຈະຖືກປ່ຽນແປງ ແລະ ນີ້ແມ່ນເອີ້ນວ່າ: "ການປ່ຽນແປງ". ມັນພຽງພໍທີ່ຈະເວົ້າວ່າ ໄພພິບັດໃນອະນາຄົດຈະຮ້າຍແຮງ. ກາງຄືນອາດມາແທນກາງເວັນ, ດວງຕາເວັນອາດຈະບໍ່ປາກົດເປັນເວລາໜຶ່ງປີ, ອາດຈະມີຄວາມຮ້ອນທີ່ເຜົາໄໝ້ເປັນເວລາຫຼາຍເດືອນ, ເດືອນແຮມອາດຈະຢູ່ກັບມະນຸດຕະຫຼອດ, ສະພາບທີ່ແປກປະຫຼາດຂອງດວງຕາເວັນ ແລະ ດວງເດືອນທີ່ຂຶ້ນພ້ອມກັນອາດຈະປາກົດມີ ແລະ ອື່ນໆ. ໃນທີ່ສຸດແລ້ວ ຫຼັງຈາກການປ່ຽນແປງທີ່ໝູນວຽນໄປມາ ພ້ອມກັບການເວລາທີ່ຜ່ານໄປ, ສິ່ງເຫຼົ່ານັ້ນຈະຖືກສ້າງຂຶ້ນໃໝ່. ພຣະເຈົ້າເອົາໃຈໃສ່ເປັນພິເສດກັບການຈັດແຈງຂອງພຣະອົງສຳລັບຜູ້ທີ່ເປັນຄົນຂອງຜີສາດຮ້າຍ. ສະນັ້ນ, ພຣະອົງຈຶ່ງຕັ້ງໃຈກ່າວວ່າ: "ໃນບັນດາມະນຸດໃນຈັກກະວານ, ທຸກຄົນທີ່ເປັນຄົນຂອງຜີສາດຮ້າຍຈະຖືກກຳຈັດ". ກ່ອນ "ຜູ້ຄົນ" ເຫຼົ່ານີ້ຈະໄດ້ສະແດງທາດແທ້ຂອງພວກເຂົາ ພຣະເຈົ້າແມ່ນໄດ້ໃຊ້ພວກເຂົາມາຕະຫຼອດ ເພື່ອໃຫ້ເຮັດການບໍລິການ; ດ້ວຍເຫດນັ້ນ ພຣະອົງຈຶ່ງບໍ່ສົນໃຈກັບການກະທຳຂອງພວກເຂົາ, ພຣະອົງບໍ່ໃຫ້ "ລາງວັນ" ແກ່ພວກເຂົາເມື່ອພວກເຂົາເຮັດດີ ຫຼື ພຣະອົງຕັດ "ຄ່າຈ້າງ" ຂອງພວກເຂົາເມື່ອພວກເຂົາເຮັດບໍ່ດີ. ເພາະສະນັ້ນ ພຣະອົງຈຶ່ງບໍ່ເອົາໃຈໃສ່ພວກເຂົາ ແລະ ເມີນເສີຍຕໍ່ພວກເຂົາ. ພຣະອົງບໍ່ໄດ້ປ່ຽນແປງທັນທີຍ້ອນ "ຄວາມດີ" ຂອງພວກເຂົາ ເນື່ອງຈາກວ່າ ທາດແທ້ຂອງມະນຸດບໍ່ປ່ຽນແປງ ບໍ່ວ່າຈະໃນເວລາໃດ ຫຼື ຢູ່ບ່ອນໃດກໍຕາມ ຄືກັນກັບສັນຍາທີ່ສ້າງຂຶ້ນລະຫວ່າງພຣະເຈົ້າກັບມະນຸດ ແລະ ຄືດັ່ງທີ່ມະນຸດກ່າວວ່າ: "ຈະບໍ່ມີການປ່ຽນແປງເຖິງແມ່ນວ່າທະເລຈະແຫ້ງ ແລະ ຫີນຈະແຕກເປັນກ້ອນນ້ອຍໆ". ສະນັ້ນ, ພຣະເຈົ້າພຽງແຕ່ຈັດຜູ້ຄົນເຫຼົ່ານັ້ນຕາມປະເພດຂອງພວກເຂົາ ແລະ ບໍ່ມີຄວາມພ້ອມທີ່ຈະເອົາໃຈໃສ່ພວກເຂົາ. ຈາກເວລາແຫ່ງການຊົງສ້າງຈົນຮອດປັດຈຸບັນ, ຜີສາດຮ້າຍບໍ່ເຄີຍປະພຶດຕົນຢ່າງດີ. ມັນສ້າງຄວາມລົບກວນ, ຄວາມກໍ່ກວນ ແລະ ຄວາມຂັດແຍ້ງຕະຫຼອດ. ເມື່ອພຣະເຈົ້າກະທຳການ ຫຼື ກ່າວ ຜີສາດຮ້າຍກໍຈະພະຍາຍາມເຂົ້າຮ່ວມຕະຫຼອດ ແຕ່ພຣະເຈົ້າກໍບໍ່ສົນໃຈມັນ. ເມື່ອກ່າວເຖິງຜີສາດຮ້າຍ ຄວາມໂມໂຫຂອງພຣະເຈົ້າກໍຫຼັ່ງໄຫຼອອກມາ ເຊິ່ງບໍ່ສາມາດຢັບຢັ້ງໄດ້; ຍ້ອນພວກເຂົາບໍ່ແມ່ນຈິດວິນຍານດຽວ,

ສະນັ້ນ ຈຶ່ງບໍ່ມີຄວາມກ່ຽວຂ້ອງກັນ ໂດຍມີແຕ່ຄວາມເຫີນຫ່າງ ແລະ ການແບ່ງແຍກເທົ່ານັ້ນ. ຫຼັງຈາກການເປີດເຜີຍຕາປະທັບທັງເຈັດ ສະພາບຂອງແຜ່ນດິນໂລກກໍຮ້າຍແຮງຂຶ້ນຕະຫຼອດ ແລະ ທຸກສິ່ງ "ເດີນໜ້າຢ່າງຄຽງບ່າຄຽງໄຫຼ່ພ້ອມກັບຕາປະທັບທັງເຈັດ" ໂດຍບໍ່ໄດ້ຫ່າງໄກແມ່ນແຕ່ໜ້ອຍດຽວ. ຕະຫຼອດພຣະທຳຂອງພຣະເຈົ້າ, ພຣະເຈົ້າເຫັນຜູ້ຄົນມຶນເມົາ, ພວກເຂົາບໍ່ຕື່ນຕົວເລີຍ. ເພື່ອໄປຮອດຈຸດທີ່ສູງກວ່າເກົ່າ ເພື່ອປຸກກຳລັງຂອງທຸກຄົນ ແລະ ຍິ່ງໄປກວ່ານັ້ນ ເພື່ອເຮັດໃຫ້ພາລະກິດຂອງພຣະເຈົ້າສິ້ນສຸດໃນຈຸດສູງສຸດຂອງພາລະກິດ, ພຣະເຈົ້າຈຶ່ງໄດ້ຖາມຄຳຖາມຈຳນວນໜຶ່ງກັບຜູ້ຄົນ ຄືກັບວ່າ ເປັນການສູບລົມເຂົ້າທ້ອງຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພຣະອົງກໍຈະໄດ້ເຕີມເຕັມທຸກຄົນ. ຍ້ອນຜູ້ຄົນເຫຼົ່ານີ້ບໍ່ມີວຸດທິພາວະທີ່ແທ້ຈິງ, ອີງຕາມສະຖານະການຕົວຈິງ ຜູ້ທີ່ຖືກສູບລົມໃສ່ຈຶ່ງແມ່ນສິນຄ້າທີ່ໄດ້ມາດຕະຖານ ໃນຂະນະທີ່ຜູ້ທີ່ບໍ່ໄດ້ຖືກສູບລົມໃສ່ແມ່ນຂີ້ເຫຍື້ອທີ່ບໍ່ມີປະໂຫຍດ. ນີ້ແມ່ນຄວາມຕ້ອງການຂອງພຣະເຈົ້າຕໍ່ມະນຸດ ແລະ ເປົ້າໝາຍຂອງວິທີການທີ່ພຣະເຈົ້າກ່າວ. ໂດຍສະເພາະແລ້ວ ເມື່ອພຣະເຈົ້າກ່າວວ່າ: "ເປັນໄປໄດ້ບໍວ່າ ເມື່ອເຮົາຢູ່ເທິງແຜ່ນດິນໂລກ ເຮົາບໍ່ໄດ້ເປັນຄືກັນກັບຕອນທີ່ເຮົາຢູ່ໃນສະຫວັນ? ເປັນໄປໄດ້ບໍວ່າ ເມື່ອເຮົາຢູ່ສະຫວັນ ເຮົາບໍ່ສາມາດລົງມາເທິງແຜ່ນດິນໂລກ? ເປັນໄປໄດ້ບໍວ່າ ເມື່ອເຮົາຢູ່ເທິງແຜ່ນດິນໂລກ, ເຮົາບໍ່ສົມຄວນເກີດໃນສະຫວັນ?" ເຊິ່ງຄຳຖາມເຫຼົ່ານີ້ແມ່ນເປັນເສັ້ນທາງທີ່ແຈ່ມແຈ້ງໃນການທີ່ມະນຸດອາດຈະຮູ້ຈັກພຣະເຈົ້າ. ຈາກພຣະທຳຂອງພຣະເຈົ້າ ຈະເຫັນຄວາມປະສົງອັນຮີບດ່ວນຂອງພຣະອົງ; ຜູ້ຄົນບໍ່ສາມາດບັນລຸສິ່ງນີ້ໄດ້ ແລະ ພຣະເຈົ້າກໍໄດ້ເພີ່ມເງື່ອນໄຂຊໍ້າແລ້ວຊໍ້າອີກ, ດ້ວຍເຫດນັ້ນ ຈຶ່ງເປັນການເຕືອນທຸກຄົນໃຫ້ຮູ້ຈັກພຣະເຈົ້າແຫ່ງສະຫວັນທີ່ຢູ່ເທິງແຜ່ນດິນໂລກ ແລະ ໃຫ້ຮູ້ຈັກພຣະເຈົ້າທີ່ຢູ່ໃນສະຫວັນ ແຕ່ດຳລົງຊີວິດຢູ່ເທິງແຜ່ນດິນໂລກ.

ຈາກພຣະທຳຂອງພຣະເຈົ້າແມ່ນສາມາດເຫັນສະພາບຂອງມະນຸດ: "ມະນຸດທຸກຄົນໃຊ້ຄວາມພະຍາຍາມໃນພຣະທຳຂອງເຮົາ, ດຳເນີນການສືບສວນຂອງພວກເຂົາເອງໃນຮູບຮ່າງພາຍນອກຂອງເຮົາ, ແຕ່ພວກເຂົາກໍລ້ວນແລ້ວແຕ່ພົບກັບຄວາມລົ້ມເຫຼວ ໂດຍທີ່ຄວາມພະຍາຍາມຂອງພວກເຂົາບໍ່ມີໝາກຜົນຫຍັງເລີຍ ແລະ ກົງກັນຂ້າມ ພວກເຂົາຖືກຕີໃຫ້ລົ້ມດ້ວຍພຣະທຳຂອງເຮົາ ແລະ ບໍ່ກ້າລຸກຂຶ້ນອີກເລີຍ". ຜູ້ໃດສາມາດເຂົ້າໃຈຄວາມໂສກເສົ້າຂອງພຣະເຈົ້າແດ່? ຜູ້ໃດສາມາດປອບໃຈພຣະເຈົ້າບໍ່? ຜູ້ໃດຍອມເຮັດຕາມໃຈພຣະເຈົ້າໃນສິ່ງທີ່ພຣະອົງຂໍບໍ່? ເມື່ອຜູ້ຄົນບໍ່ໄດ້ຮັບໝາກຜົນ ພວກເຂົາກໍປະຕິເສດຕົວເອງ ແລະ ຍອມຮັບເອົາການປັ້ນແຕ່ງຂອງພຣະເຈົ້າຢ່າງແທ້ຈິງ. ເມື່ອພວກເຂົາສະແດງໃຫ້ເຫັນເຖິງຫົວໃຈທີ່ແທ້ຈິງຂອງພວກເຂົາ, ແຕ່ລະຄົນກໍຖືກແຍກອອກຕາມປະເພດຂອງພວກເຂົາເທື່ອລະໜ້ອຍ ແລະ ດ້ວຍເຫດນັ້ນ ຈຶ່ງເຫັນໄດ້ວ່າ ທາດແທ້ຂອງທູດສະຫວັນຄືການເຊື່ອຟັງທັງໝົດຕໍ່ພຣະເຈົ້າ. ສະນັ້ນ, ພຣະເຈົ້າຈຶ່ງກ່າວວ່າ: "ມະນຸດຖືກເປີດໂປງໃນຮູບຮ່າງເດີມຂອງພວກເຂົາ". ເມື່ອພາລະກິດຂອງພຣະເຈົ້າຮອດຂັ້ນຕອນນີ້ ທຸກຢ່າງກໍຈະໄດ້ສຳເລັດລົງ. ປາກົດວ່າ ພຣະເຈົ້າບໍ່ໄດ້ກ່າວຫຍັງກ່ຽວກັບການທີ່ພຣະອົງເປັນຕົວຢ່າງໃຫ້ກັບລູກຊາຍ ແລະ ປະຊາຊົນຂອງພຣະອົງ, ແຕ່ກົງກັນຂ້າມແມ່ນໄດ້ສຸມໃສ່ການເຮັດໃຫ້ທຸກຄົນສະແດງຮູບຮ່າງດັ້ງເດີມຂອງພວກເຂົາ. ພວກເຈົ້າເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ບໍ?

# ບົດທີ 27

ໃນປັດຈຸບັນ ພຣະທຳຂອງພຣະເຈົ້າແມ່ນໄດ້ເຖິງຈຸດສູງສຸດ ເຊິ່ງເວົ້າໄດ້ວ່າ ພາກສ່ວນທີສອງຂອງຍຸກແຫ່ງການພິພາກສາແມ່ນໄດ້ເຖິງຈຸດສູງຂອງມັນແລ້ວ. ແຕ່ນັ້ນບໍ່ແມ່ນຈຸດທີ່ສູງທີ່ສຸດ. ໃນເວລານີ້ ນໍ້າສຽງຂອງພຣະເຈົ້າໄດ້ປ່ຽນໄປ, ມັນບໍ່ແມ່ນການເຍາະເຍີ້ຍ ຫຼື ຕະຫຼົກ ແລະ ມັນບໍ່ແມ່ນການຂ້ຽນຕີ ຫຼື ສາບແຊ່ງ; ພຣະເຈົ້າໄດ້ຜ່ອນນໍ້າສຽງຂອງພຣະທຳຂອງພຣະອົງລົງ. ດຽວນີ້ ພຣະເຈົ້າເລີ່ມ "ແລກປ່ຽນຄວາມຮູ້ສຶກ" ກັບມະນຸດ. ພຣະເຈົ້າທັງສືບຕໍ່ພາລະກິດຂອງຍຸກແຫ່ງການພິພາກສາ ແລະ ໃນເວລາດຽວກັນກໍເປີດເສັ້ນທາງຂອງພາກສ່ວນຕໍ່ໄປຂອງພາລະກິດ ເພື່ອວ່າ ທຸກພາກສ່ວນຂອງພາລະກິດຂອງພຣະອົງຈະໄດ້ກ່ຽວພັນກັນ. ໃນດ້ານໜຶ່ງ, ພຣະອົງກ່າວກ່ຽວກັບ "ຄວາມດື້ດ້ານ ແລະ ຄວາມຜິດຊໍ້າຊາກ" ຂອງມະນຸດ ແລະ ໃນອີກດ້ານ ພຣະອົງກ່າວກ່ຽວກັບ "ໃນຄວາມປິຕິຍິນດີ ແລະ ຄວາມໂສກເສົ້າຂອງການຖືກຕັດຂາດ ແລະ ຫຼັງຈາກນັ້ນກໍກັບມາຮ່ວມກັນໃໝ່ກັບມະນຸດ" ເຊິ່ງທັງໝົດໄດ້ກະຕຸ້ນປະຕິກິລິຍາໃນໃຈຂອງຜູ້ຄົນ ແລະ ດົນໃຈແມ່ນແຕ່ຜູ້ທີ່ໃຈເຢັນຊາທີ່ສຸດໃນບັນດາມະນຸດ. ເປົ້າໝາຍຂອງພຣະເຈົ້າໃນການກ່າວພຣະທຳເຫຼົ່ານີ້ ໂດຍຕົ້ນຕໍແລ້ວໃນທີ່ສຸດແມ່ນເພື່ອເຮັດໃຫ້ທຸກຄົນລົ້ມລົງຢ່າງໄຮ້ສຽງຢູ່ຕໍ່ໜ້າພຣະເຈົ້າ ແລະ ພຽງຫຼັງຈາກນັ້ນ "ເຮົາຈຶ່ງເຮັດໃຫ້ການກະທຳຂອງເຮົາເປັນທີ່ປະຈັກ, ເຮັດໃຫ້ທຸກຄົນຮູ້ຈັກເຮົາຜ່ານຄວາມລົ້ມເຫຼວຂອງພວກເຂົາເອງ". ຄວາມຮູ້ກ່ຽວກັບພຣະເຈົ້າຂອງຜູ້ຄົນໃນຍຸກນີ້ລ້ວນແລ້ວແຕ່ຍັງຢູ່ໃນຜິວເຜີນ; ມັນບໍ່ແມ່ນຄວາມຮູ້ທີ່ແທ້ຈິງ. ເຖິງແມ່ນວ່າພວກເຂົາຈະພະຍາຍາມຢ່າງໜັກເທົ່າທີ່ພວກເຂົາຈະສາມາດ ແຕ່ພວກເຂົາກໍບໍ່ສາມາດບັນລຸຄວາມປະສົງຂອງພຣະເຈົ້າໄດ້; ໃນປັດຈຸບັນ ພຣະທຳຂອງພຣະເຈົ້າແມ່ນໄດ້ເຖິງຈຸດສູງສຸດແລ້ວ ແຕ່ຜູ້ຄົນຍັງຢູ່ໃນຂັ້ນຕອນເບື້ອງຕົ້ນ ແລະ ດ້ວຍເຫດນີ້ ຈຶ່ງບໍ່ສາມາດເຂົ້າສູ່ພຣະວັດຈະນະແຫ່ງປັດຈຸບັນໄດ້ ເຊິ່ງສະແດງໃຫ້ເຫັນວ່າ ພຣະເຈົ້າ ແລະ ມະນຸດແມ່ນແຕກຕ່າງກັນຫຼາຍເທົ່າທີ່ຈະສາມາດເປັນໄປໄດ້. ບົນພື້ນຖານຂອງການປຽບທຽບນີ້, ເມື່ອພຣະທຳຂອງພຣະເຈົ້າສິ້ນສຸດລົງ ຜູ້ຄົນກໍຈະສາມາດພຽງແຕ່ບັນລຸມາດຕະຖານຕໍ່າສຸດຂອງພຣະເຈົ້າເທົ່ານັ້ນ. ນີ້ແມ່ນວິທີການທີ່ພຣະເຈົ້າເຮັດພາລະກິດໃນຜູ້ຄົນເຫຼົ່ານີ້ ທີ່ຖືກມັງກອນແດງທີ່ຍິ່ງໃຫຍ່ເຮັດໃຫ້ເສື່ອມຊາມຢ່າງສິ້ນເຊີງ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງຕ້ອງເຮັດພາລະກິດ ເພື່ອໃຫ້ບັນລຸຜົນໄດ້ດີທີ່ສຸດ. ຜູ້ຄົນຂອງຄຣິສຕະຈັກໃຫ້ຄວາມສົນໃຈໜ້ອຍດຽວຕໍ່ພຣະທຳຂອງພຣະເຈົ້າ ແຕ່ເຈດຕະນາຂອງພຣະເຈົ້າກໍຄື ພວກເຂົາຈະໄດ້ຮູ້ຈັກພຣະເຈົ້າໃນພຣະທຳຂອງພຣະອົງ; ມັນບໍ່ແຕກຕ່າງກັນບໍ? ຢ່າງໃດກໍຕາມ, ສະຖານະການໃນປັດຈຸບັນ ພຣະເຈົ້າແມ່ນບໍ່ໄດ້ສົນໃຈຄວາມອ່ອນແອຂອງມະນຸດອີກຕໍ່ໄປ ແລະ ສືບຕໍ່ກ່າວໂດຍບໍ່ສົນໃຈວ່າ ຜູ້ຄົນຈະສາມາດຮັບເອົາພຣະທຳຂອງພຣະອົງໄດ້ ຫຼື ບໍ່. ອີງຕາມເຈດຕະນາຂອງພຣະອົງ, ເມື່ອເວລາພຣະທຳຂອງພຣະອົງສິ້ນສຸດລົງກໍຈະເປັນເວລາທີ່ພາລະກິດຂອງພຣະອົງເທິງແຜ່ນດິນໂລກສຳເລັດລົງ. ແຕ່ພາລະກິດໃນຕອນນີ້ແມ່ນບໍ່ຄືກັບໃນອະດີດ. ເມື່ອພຣະວັດຈະນະຂອງພຣະເຈົ້າສິ້ນສຸດລົງກໍຈະບໍ່ມີໃຜຮູ້; ເມື່ອພາລະກິດຂອງພຣະເຈົ້າສິ້ນສຸດລົງກໍຈະບໍ່ມີໃຜຮູ້; ແລະ ເມື່ອຮູບຮ່າງຂອງພຣະເຈົ້າປ່ຽນໄປກໍຈະບໍ່ມີໃຜ

ຮູ້. ສິ່ງດັ່ງກ່າວແມ່ນສະຕິປັນຍາຂອງພຣະເຈົ້າ. ເພື່ອຫຼີກເວັ້ນການກ່າວຫາໃດໜຶ່ງຈາກຊາຕານ ແລະ ການແຊກແຊງໃດໜຶ່ງຈາກກອງກຳລັງທີ່ບໍ່ເປັນມິດ, ພຣະເຈົ້າປະຕິບັດພາລະກິດໂດຍບໍ່ໃຫ້ໃຜຮູ້ ແລະ ໃນເວລານີ້ກໍຈະບໍ່ມີປະຕິກິລິຍາໃນທ່າມກາງມະນຸດເທິງແຜ່ນດິນໂລກ. ເຖິງແມ່ນວ່າ ສັນຍານຂອງການປ່ຽນຮູບຮ່າງຂອງພຣະເຈົ້າແມ່ນຄັ້ງໜຶ່ງເຄີຍຖືກກ່າວເຖິງ ແຕ່ບໍ່ມີໃຜສາມາດເຫັນສິ່ງນີ້ ເນື່ອງຈາກມະນຸດໄດ້ລືມ ແລະ ເຂົາກໍບໍ່ໄດ້ສົນໃຈໃນສິ່ງນີ້. ຍ້ອນການໂຈມຕີຈາກທັງພາຍໃນ ແລະ ພາຍນອກ ນັ້ນກໍຄື ຄວາມພິນາດຂອງໂລກພາຍນອກ ແລະ ການເຜົາໄໝ້ ແລະ ຊຳລະລ້າງຈາກພຣະທຳຂອງພຣະເຈົ້າ ຜູ້ຄົນຈຶ່ງບໍ່ເຕັມໃຈເຮັດວຽກໜັກເພື່ອພຣະເຈົ້າອີກຕໍ່ໄປ ເພາະພວກເຂົາຫຍຸ້ງຢູ່ກັບວຽກງານຂອງຕົວເອງຫຼາຍ. ເມື່ອທຸກຄົນເຖິງຂັ້ນທີ່ຕ້ອງປະຕິເສດຄວາມຮູ້ ແລະ ສະແຫວງຫາອະດີດ, ເມື່ອທຸກຄົນໄດ້ເຫັນຕົວເອງຢ່າງຊັດເຈນ, ພວກເຂົາກໍຈະລົ້ມເຫຼວ ແລະ ພວກເຂົາເອງກໍຈະບໍ່ມີພື້ນທີ່ໃນຫົວໃຈຂອງພວກເຂົາອີກຕໍ່ໄປ. ພຽງຫຼັງຈາກນັ້ນ ຜູ້ຄົນຈຶ່ງຈະປາດຖະໜາເຖິງພຣະທຳຂອງພຣະເຈົ້າຢ່າງຈິງໃຈ, ພຽງຫຼັງຈາກນັ້ນ ພຣະທຳຂອງພຣະເຈົ້າຈຶ່ງຈະມີພື້ນທີ່ໃນຫົວໃຈຂອງພວກເຂົາຢ່າງແທ້ຈິງ ແລະ ພຽງຫຼັງຈາກນັ້ນ ພຣະທຳຂອງພຣະເຈົ້າຈຶ່ງຈະກາຍເປັນແຫຼ່ງທີ່ມາຂອງການມີຢູ່ຂອງພວກເຂົາ ແລະ ໃນຊ່ວງເວລານີ້ ຄວາມປະສົງຂອງພຣະເຈົ້າກໍຈະຖືກເຮັດໃຫ້ສຳເລັດ. ແຕ່ຜູ້ຄົນໃນປັດຈຸບັນແມ່ນຫ່າງໄກຈາກສິ່ງນັ້ນຫຼາຍ. ພວກເຂົາບາງຄົນບໍ່ໄດ້ເຄື່ອນໄຫວແມ່ນແຕ່ນິ້ວດຽວ ແລະ ດ້ວຍເຫດນັ້ນພຣະເຈົ້າຈຶ່ງເວົ້າວ່າ ນີ້ຄື: "ຄວາມຜິດຊໍ້າຊາກ".

ພຣະທຳທັງໝົດຂອງພຣະເຈົ້າປະກອບມີຫຼາຍຄຳຖາມ. ເປັນຫຍັງພຣະເຈົ້າຈຶ່ງມີແຕ່ຖາມຄຳຖາມດັ່ງກ່າວ? "ເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດກັບໃຈ ແລະ ເກີດໃໝ່ໄດ້? ເປັນຫຍັງພວກເຂົາຈຶ່ງເຕັມໃຈທີ່ຈະດຳລົງຊີວິດຢູ່ໃນບຶງຕະຫຼອດໄປ ແທນທີ່ຈະຢູ່ໃນບ່ອນທີ່ປາສະຈາກຂີ້ຕົມ? ..." ໃນອະດີດ ພຣະເຈົ້າໄດ້ເຮັດພາລະກິດດ້ວຍວິທີການຊີ້ໃຫ້ເຫັນສິ່ງຕ່າງໆໂດຍກົງ ຫຼື ການເປີດເຜີຍໂດຍກົງ. ແຕ່ຫຼັງຈາກຜູ້ຄົນໄດ້ທົນທຸກກັບຄວາມເຈັບປວດຢ່າງຫຼວງຫຼາຍ ພຣະເຈົ້າຈຶ່ງບໍ່ໄດ້ເວົ້າໃນລັກສະນະນີ້ໂດຍກົງ. ພາຍໃນຄຳຖາມເຫຼົ່ານີ້, ຜູ້ຄົນແມ່ນເຫັນຄວາມບົກຜ່ອງຂອງຕົວເອງ ແລະ ພວກເຂົາແມ່ນເຂົ້າໃຈເຖິງເສັ້ນທາງໃນການປະຕິບັດ. ຍ້ອນທຸກຄົນມັກທີ່ຈະກິນສິ່ງທີ່ມີຢູ່ແລ້ວ ພຣະເຈົ້າຈຶ່ງເວົ້າໃຫ້ເໝາະກັບຄວາມຕ້ອງການຂອງພວກເຂົາ ໂດຍໃຫ້ຫົວຂໍ້ພວກເຂົາໄດ້ໄຕ່ຕອງ ເພື່ອວ່າ ພວກເຂົາຈະສາມາດໄຕ່ຕອງພວກມັນ. ນີ້ແມ່ນດ້ານໜຶ່ງຂອງຄວາມໝາຍຂອງຄຳຖາມຂອງພຣະເຈົ້າ. ໂດຍທຳມະຊາດແລ້ວ ນີ້ບໍ່ແມ່ນຄວາມໝາຍຂອງຄຳຖາມອື່ນຂອງພຣະອົງ, ຍົກຕົວຢ່າງ: ເປັນໄປໄດ້ບໍວ່າ ຍ້ອນເຮົາປະຕິບັດຕໍ່ພວກເຂົາຢ່າງໂຫດຮ້າຍ? ເປັນໄປໄດ້ບໍວ່າ ຍ້ອນເຮົາຊີ້ນຳພວກເຂົາໄປໃນທິດທາງທີ່ຜິດ? ເປັນໄປໄດ້ບໍວ່າ ຍ້ອນເຮົາກຳລັງນຳພາພວກເຂົາໄປສູ່ນະຮົກ? ຄຳຖາມແບບນີ້ສະແດງໃຫ້ເຫັນແນວຄວາມຄິດຢູ່ໃນສ່ວນເລິກຂອງຫົວໃຈຂອງຜູ້ຄົນ. ເຖິງແມ່ນວ່າ ປາກຂອງພວກເຂົາຈະບໍ່ເວົ້າເຖິງແນວຄວາມຄິດເຫຼົ່ານີ້ ແຕ່ຫົວໃຈຂອງພວກເຂົາກໍມີຂໍ້ສົງໄສ ແລະ ພວກເຂົາເຊື່ອວ່າ ພຣະທຳຂອງພຣະເຈົ້າໄດ້ສະແດງເຖິງພວກເຂົາໃນລັກສະນະທີ່ບໍ່ມີປະໂຫຍດຫຍັງ. ໂດຍທຳມະຊາດແລ້ວ ຜູ້ຄົນດັ່ງກ່າວບໍ່ຮູ້ຈັກຕົວເອງ ແຕ່ໃນທີ່ສຸດ ພວກເຂົາກໍຈະຍອມຮັບຄວາມພ່າຍແພ້ຈາກພຣະທຳຂອງພຣະເຈົ້າ ເຊິ່ງນີ້

ແມ່ນສິ່ງທີ່ຫຼີກເວັ້ນບໍ່ໄດ້. ຫຼັງຈາກຄຳຖາມເຫຼົ່ານີ້ ພຣະເຈົ້າຍັງເວົ້າວ່າ: “ເຮົາຈະທຳລາຍບັນດາປະຊາຊາດໃຫ້ກາຍເປັນເສດສ່ວນນ້ອຍໆ, ຍິ່ງໄປກວ່ານັ້ນ ສຳລັບຄອບຄົວຂອງມະນຸດແມ່ນບໍ່ຕ້ອງເອີ່ຍເຖິງເລີຍ”. ເມື່ອຜູ້ຄົນຍອມຮັບຊື່ຂອງພຣະເຈົ້າ, ຜົນຕາມມາກໍຄື ທຸກຊາດຈະສັ່ນສະເທືອນ, ຜູ້ຄົນຈະປ່ຽນຄວາມຄິດຂອງພວກເຂົາເທື່ອລະໜ້ອຍ ແລະ ໃນຄອບຄົວ ຄວາມສຳພັນລະຫວ່າງພໍ່ ແລະ ລູກຊາຍ, ແມ່ ແລະ ລູກສາວ ແລະ ຜົວ ແລະ ເມຍກໍຈະໝົດໄປ. ຍິ່ງໄປກວ່ານັ້ນ ຄວາມສຳພັນລະຫວ່າງຜູ້ຄົນໃນຄອບຄົວຍິ່ງຈະຫ່າງເຫີນ; ພວກເຂົາຈະຮ່ວມກັບຄອບຄົວທີ່ຍິ່ງໃຫຍ່ ແລະ ການດຳລົງຊີວິດຢູ່ປົກກະຕິຄອບຄົວສ່ວນໃຫຍ່ຈະຖືກທຳລາຍ. ຍ້ອນສິ່ງນີ້ ແນວຄວາມຄິດຂອງ “ຄອບຄົວ” ໃນຫົວໃຈຂອງຜູ້ຄົນກໍຈະມືດມົວຍິ່ງຂຶ້ນ.

ໃນພຣະທຳຂອງພຣະເຈົ້າແຫ່ງປັດຈຸບັນ ເປັນຫຍັງຫຼາຍຢ່າງຈຶ່ງຖືກອຸທິດຕໍ່ “ການແລກປ່ຽນທັດສະນະ” ກັບຜູ້ຄົນ? ໂດຍທຳມະຊາດແລ້ວ ນີ້ແມ່ນເພື່ອບັນລຸຜົນໃດໜຶ່ງ ເຊິ່ງຈາກສິ່ງນັ້ນ ມັນອາດຈະເຫັນວ່າຫົວໃຈຂອງພຣະເຈົ້າເຕັມໄປດ້ວຍຄວາມກັງວົນໃຈ. ພຣະເຈົ້າເວົ້າວ່າ: “ເມື່ອເຮົາໂສກເສົ້າ ແມ່ນໃຜສາມາດປອບໃຈເຮົາດ້ວຍຫົວໃຈຂອງພວກເຂົາໄດ້?” ພຣະເຈົ້າເວົ້າພຣະທຳເຫຼົ່ານີ້ຍ້ອນໃຈຂອງພຣະອົງແມ່ນເຕັມໄປດ້ວຍຄວາມໂສກເສົ້າ. ຜູ້ຄົນບໍ່ສາມາດໃຫ້ຄວາມເອົາໃຈໃສ່ທັງໝົດແກ່ຄວາມປະສົງຂອງພຣະເຈົ້າ ແລະ ພວກເຂົາໄຮ້ສິນທຳຕະຫຼອດ, ພວກເຂົາບໍ່ສາມາດຄວບຄຸມຕົວເອງ ແລະ ພວກເຂົາເຮັດຕາມທີ່ພວກເຂົາພໍໃຈ; ພວກເຂົາຊ້າເກີນໄປ ແລະ ພວກເຂົາໃຫ້ອະໄພຕົວເອງຕະຫຼອດ ແລະ ບໍ່ເອົາໃຈໃສ່ຄວາມປະສົງຂອງພຣະເຈົ້າ. ແຕ່ຍ້ອນວ່າ ຜູ້ຄົນຖືກຊາຕານເຮັດໃຫ້ເສື່ອມຊາມຈົນຮອດປັດຈຸບັນ ແລະ ບໍ່ສາມາດປົດປ່ອຍຕົວເອງ ພຣະເຈົ້າຈຶ່ງເວົ້າວ່າ: “ພວກເຂົາຈະສາມາດຫຼົບໜີຈາກປາກຂອງໝາປ່າທີ່ຫິວໂຫຍໄດ້ແນວໃດ? ພວກເຂົາຈະປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກໄພອັນຕະລາຍຂອງມັນ ແລະ ການລໍ້ລວງຂອງມັນໄດ້ແນວໃດ?” ຜູ້ຄົນດຳລົງຊີວິດໃນເນື້ອໜັງ ເຊິ່ງນັ້ນກໍຄືດຳລົງຊີວິດໃນປາກຂອງໝາປ່າທີ່ຫິວໂຫຍ. ຍ້ອນສິ່ງນີ້ ແລະ ຍ້ອນຜູ້ຄົນບໍ່ມີການປຸກຈິດສຳນຶກຕົວເອງ ແລະ ຍອມຕາມໃຈຕົວເອງຕະຫຼອດ ແລະ ຍອມຈຳນົນຕໍ່ສິ່ງມຶນເມົາ ພຣະເຈົ້າຈຶ່ງບໍ່ສາມາດຊ່ວຍໄດ້ ນອກຈາກກັງວົນໃຈ. ດ້ວຍເຫດນັ້ນ ຍິ່ງພຣະເຈົ້າເຕືອນຜູ້ຄົນ ພວກເຂົາກໍຍິ່ງຮູ້ສຶກດີໃຈ ແລະ ຍິ່ງເຕັມໃຈໃນການພົວພັນກັບພຣະເຈົ້າຫຼາຍຂຶ້ນ. ພຽງຫຼັງຈາກນັ້ນ ມະນຸດ ແລະ ພຣະເຈົ້າຈຶ່ງມີຄວາມພົວພັນກັນຢ່າງສັນຕິສຸກໂດຍບໍ່ມີການແບ່ງແຍກ ຫຼື ຄວາມຫ່າງເຫີນລະຫວ່າງພວກເຂົາ. ໃນປັດຈຸບັນ ມວນມະນຸດທັງໝົດແມ່ນລໍຖ້າການມາເຖິງຂອງມື້ຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ມວນມະນຸດຈຶ່ງບໍ່ເຄີຍເຄື່ອນຍ້າຍໄປທາງໜ້າ. ແຕ່ພຣະເຈົ້າກໍເວົ້າວ່າ: “ເມື່ອດວງຕາເວັນແຫ່ງຄວາມຊອບທຳປະກົດຂຶ້ນ, ພາກຕະເວັນອອກຈະຖືກສ່ອງແສງ ແລະ ຫຼັງຈາກນັ້ນ ມັນກໍຈະສ່ອງແສງໃຫ້ກັບຈັກກະວານທັງປວງ, ສ່ອງແສງໄປເຖິງທຸກຄົນ”. ເວົ້າອີກຢ່າງໜຶ່ງກໍຄື ເມື່ອພຣະເຈົ້າປ່ຽນຮູບຮ່າງຂອງພຣະອົງ, ທິດຕາເວັນອອກຈະໄດ້ຮັບແສງສະຫວ່າງກ່ອນ ແລະ ປະເທດຈາກທິດຕາເວັນອອກຈະເປັນປະເທດທຳອິດທີ່ຖືກກຳຈັດ ເຊິ່ງຫຼັງຈາກນັ້ນ ປະເທດທີ່ເຫຼືອກໍຈະຖືກສ້າງໃໝ່ຈາກທິດໃຕ້ຫາທິດເໜືອ. ນີ້ແມ່ນລຳດັບ ແລະ ທຸກສິ່ງຈະເປັນໄປຕາມພຣະທຳຂອງພຣະເຈົ້າ ແລະ ເມື່ອໄລຍະນີ້

ສິ້ນສຸດລົງ ທຸກຄົນກໍຈະເຫັນ. ພຣະເຈົ້າປະຕິບັດພາລະກິດຕາມລຳດັບນີ້. ເມື່ອພວກເຂົາເຫັນມື້ນີ້ ຜູ້ຄົນກໍຈະດີໃຈຫຼາຍ. ມັນສາມາດເຫັນໄດ້ຈາກເຈດຕະນາອັນຮີບດ່ວນຂອງພຣະເຈົ້າວ່າ ມື້ນີ້ແມ່ນບໍ່ໄດ້ຢູ່ຫ່າງໄກເລີຍ.

ໃນພຣະທຳທີ່ກ່າວໃນມື້ນີ້, ພາກສ່ວນທີສອງ ແລະ ທີສາມແມ່ນເຮັດໃຫ້ທຸກຄົນທີ່ຮັກພຣະເຈົ້າມີນໍ້າຕາແຫ່ງຄວາມເຈັບປວດ. ຫົວໃຈຂອງພວກເຂົາແມ່ນຖືກປົກບັງດ້ວຍເງົາມືດທັນທີ ແລະ ນັບແຕ່ເວລານີ້ເປັນຕົ້ນໄປ ທຸກຄົນຈະເຕັມໄປດ້ວຍຄວາມໂສກເສົ້າຢ່າງມະຫາສານຍ້ອນຫົວໃຈຂອງພຣະເຈົ້າ. ພວກເຂົາຈະບໍ່ຮູ້ສຶກສະບາຍໃຈຈົນກວ່າພຣະເຈົ້າໄດ້ສຳເລັດພາລະກິດຂອງພຣະອົງຢູ່ເທິງແຜ່ນດິນໂລກ. ນີ້ແມ່ນກະແສທົ່ວໄປ. "ຄວາມໂມໂຫເກີດຂຶ້ນພາຍໃນຫົວໃຈຂອງເຮົາ ຕາມດ້ວຍຄວາມຮູ້ສຶກໂສກເສົ້າຢ່າງໜັກ. ເມື່ອຕາຂອງເຮົາເຫັນການກະທຳຂອງຜູ້ຄົນ ແລະ ທຸກຄຳເວົ້າ ແລະ ການກະທຳຂອງພວກເຂົານັ້ນສົກກະປົກ, ຄວາມໂກດຮ້າຍຂອງເຮົາກໍຮ້າຍແຮງຂຶ້ນ ແລະ ໃນຫົວໃຈຂອງເຮົາກໍຮູ້ສຶກເຖິງຄວາມບໍ່ຍຸຕິທຳຂອງໂລກມະນຸດຢ່າງໃຫຍ່ ເຊິ່ງເຮັດໃຫ້ເຮົາເສົ້າໃຈຍິ່ງຂຶ້ນ; ເຮົາປາດຖະໜາທີ່ຈົບສິ້ນເນື້ອໜັງຂອງມະນຸດທັນທີ. ເຮົາບໍ່ຮູ້ວ່າ ເປັນຫຍັງມະນຸດຈຶ່ງບໍ່ສາມາດຊຳລະລ້າງຕົວເອງໃນເນື້ອໜັງ ແລະ ເປັນຫຍັງມະນຸດຈຶ່ງບໍ່ສາມາດຮັກຕົວເອງໃນເນື້ອໜັງ. ເປັນໄປໄດ້ບໍທີ່ 'ພາລະໜ້າທີ່' ຂອງເນື້ອໜັງແມ່ນຍິ່ງໃຫຍ່ຫຼາຍ?" ໃນພຣະທຳຂອງພຣະເຈົ້າໃນປັດຈຸບັນ ພຣະເຈົ້າໄດ້ເປີດເຜີຍຄວາມກັງວົນໃຈທັງໝົດພາຍໃນຫົວໃຈຂອງພຣະອົງຕໍ່ມະນຸດຢ່າງເປີດເຜີຍ ໂດຍບໍ່ໄດ້ອົດກັ້ນສິ່ງໃດໄວ້. ເມື່ອທູດສະຫວັນຂອງສະຫວັນຊັ້ນສາມຫຼິ້ນດົນຕີເພື່ອພຣະອົງ, ພຣະເຈົ້າກໍຍັງປາດຖະໜາເຖິງຜູ້ຄົນເທິງແຜ່ນດິນໂລກ ແລະ ເປັນຍ້ອນສິ່ງນີ້ ພຣະອົງຈຶ່ງເວົ້າວ່າ: "ເມື່ອທູດສະຫວັນຫຼິ້ນດົນຕີເພື່ອສັນລະເສີນເຮົາ, ສິ່ງນີ້ໄດ້ບັນດານຄວາມເມດຕາທີ່ເຮົາມີສຳລັບມະນຸດ. ບາງຄັ້ງ ຫົວໃຈຂອງເຮົາກໍເຕັມໄປດ້ວຍຄວາມໂສກເສົ້າ ແລະ ມັນເປັນໄປບໍ່ໄດ້ທີ່ຈະກຳຈັດຄວາມຮູ້ສຶກທີ່ເຈັບປວດນີ້ອອກໄປຈາກຕົວເຮົາເອງ". ຍ້ອນເຫດຜົນນີ້ ພຣະເຈົ້າຈຶ່ງເວົ້າວ່າ: "ເຮົາຈະແກ້ໄຂຄວາມບໍ່ຍຸຕິທຳໃນໂລກຂອງມະນຸດ. ເຮົາຈະປະຕິບັດພາລະກິດຂອງເຮົາດ້ວຍມືຂອງເຮົາເອງທົ່ວແຜ່ນດິນໂລກ, ຫ້າມບໍ່ໃຫ້ຊາຕານທຳຮ້າຍປະຊາຊົນຂອງເຮົາອີກຕໍ່ໄປ, ຫ້າມບໍ່ໃຫ້ສັດຕູເຮັດຫຍັງກໍໄດ້ຕາມທີ່ພວກເຂົາພໍໃຈອີກແລ້ວ. ເຮົາຈະກາຍເປັນກະສັດເທິງແຜ່ນດິນໂລກ ແລະ ຍ້າຍບັນລັງຂອງເຮົາໄປຢູ່ທີ່ນັ້ນ, ເຮັດໃຫ້ສັດຕູທຸກຄົນຂອງເຮົາລົ້ມລົງເທິງພື້ນດິນ ແລະ ສາລະພາບຄວາມຜິດຂອງພວກເຂົາຕໍ່ໜ້າເຮົາ". ຄວາມໂສກເສົ້າຂອງພຣະເຈົ້າເພີ່ມຄວາມກຽດຊັງຂອງພຣະອົງຕໍ່ຜີຮ້າຍ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງເປີດເຜີຍຕໍ່ມວນຊົນລ່ວງໜ້າວ່າຜີຮ້າຍຈະຈົບລົງດ້ວຍວິທີໃດ. ນີ້ແມ່ນພາລະກິດຂອງພຣະເຈົ້າ. ພຣະເຈົ້າປາດຖະໜາຕະຫຼອດທີ່ຈະຢູ່ຮ່ວມກັບທຸກຄົນອີກຄັ້ງ ແລະ ນຳເອົາຍຸກເກົ່າໄປສູ່ການສິ້ນສຸດ. ທຸກຄົນໃນທົ່ວຈັກກະວານກຳລັງເລີ່ມເຄື່ອນໄຫວ ເຊິ່ງເວົ້າໄດ້ວ່າ ທຸກຄົນທີ່ຢູ່ໃນຈັກກະວານກຳລັງເຂົ້າສູ່ການນຳພາຂອງພຣະເຈົ້າ. ດ້ວຍເຫດນັ້ນ, ຄວາມຄິດຂອງພວກເຂົາຈຶ່ງປ່ຽນເປັນແນວຄິດຕໍ່ຕ້ານຕໍ່ຈັກກະພັດຂອງພວກເຂົາ. ອີກບໍ່ດົນ ຜູ້ຄົນຂອງໂລກຈະມີຄວາມສັບສົນວຸ້ນວາຍ ແລະ ຜູ້ນຳຂອງທຸກປະເທດຈະຫຼົບໜີໄປທຸກທິດທາງ ເຊິ່ງໃນທີ່ສຸດ ກໍຈະຖືກປະຊາຊົນຂອງພວກເຂົາເອງດຶງໄປມັດໃສ່ເຄື່ອງປະຫານຊີວິດ. ນີ້ແມ່ນ

ຈຸດຈົບບັ້ນສຸດທ້າຍຂອງກະສັດຂອງຜີຮ້າຍ; ໃນທີ່ສຸດແລ້ວ ບໍ່ມີໃຜຈະສາມາດຫຼົບໜີໄດ້, ທຸກຄົນຈະຕ້ອງໄດ້ຜ່ານມັນ. ໃນປັດຈຸບັນ, ຜູ້ທີ່ "ສະຫຼາດ" ແມ່ນໄດ້ເລີ່ມຖອຍຄືນ. ເມື່ອເຫັນວ່າ ສະຖານະການບໍ່ຄ່ອຍດີ ພວກເຂົາກໍໃຊ້ໂອກາດນີ້ເພື່ອຢຸດເຊົາ ແລະ ຫຼົບໜີຈາກຄວາມລຳບາກຂອງໄພພິບັດ. ແຕ່ເຮົາຂໍເວົ້າຢ່າງແຈ່ມແຈ້ງວ່າ ພາລະກິດທີ່ພຣະເຈົ້າເຮັດໃນລະຫວ່າງຍຸກສຸດທ້າຍ ຕົ້ນຕໍແມ່ນການຂ້ຽນຕີມະນຸດ ແລ້ວຜູ້ຄົນເຫຼົ່ານີ້ຈະສາມາດຫຼົບໜີໄດ້ແນວໃດ? ປັດຈຸບັນແມ່ນຂັ້ນຕອນທຳອິດ. ມື້ໜຶ່ງ ທຸກຢ່າງທົ່ວຈັກກະວານກໍຈະຕົກຢູ່ໃນຄວາມວຸ້ນວາຍຈາກສົງຄາມ, ຜູ້ຄົນແຫ່ງແຜ່ນດິນໂລກຈະບໍ່ມີຜູ້ນຳອີກຕໍ່ໄປ, ໂລກທັງໝົດຈະຄືກັບກອງດິນຊາຍມຸ່ນ, ບໍ່ມີໃຜປົກຄອງ ແລະ ຜູ້ຄົນຈະສົນໃຈແຕ່ຊີວິດຂອງພວກເຂົາເທົ່ານັ້ນ ໂດຍບໍ່ສົນໃຈຜູ້ໃດ ເນື່ອງຈາກທຸກສິ່ງແມ່ນຖືກຄວບຄຸມໂດຍມືຂອງພຣະເຈົ້າ ເຊິ່ງນີ້ກໍຄືເຫດຜົນທີ່ພຣະເຈົ້າເວົ້າວ່າ: "ມະນຸດທຸກຄົນ ກຳລັງແຍກປະຊາຊາດຕ່າງໆເທິງແຜ່ນດິນໂລກຕາມຄວາມປະສົງຂອງເຮົາ". ຕອນນີ້ ສຽງແກຂອງທູດສະຫວັນທີ່ພຣະເຈົ້າກ່າວເຖິງຄືສັນຍານ, ມັນກຳລັງສົ່ງສຽງດັງເພື່ອເຕືອນມະນຸດ ແລະ ເມື່ອສຽງແກດັງອີກຄັ້ງ ວັນສຸດທ້າຍຂອງໂລກກໍຈະມາເຖິງ. ໃນເວລານັ້ນ ການຂ້ຽນຕີທັງໝົດຂອງພຣະເຈົ້າຈະເກີດຂຶ້ນຢູ່ແຜ່ນດິນໂລກທັງໝົດ; ນີ້ຈະເປັນການພິພາກສາທີ່ໄຮ້ຄວາມເມດຕາ ແລະ ເປັນການເລີ່ມຕົ້ນຍຸກແຫ່ງການຂ້ຽນຕີຢ່າງເປັນທາງການ. ໃນທ່າມກາງຊາວອິດສະຣາເອນຈະມີສຽງຂອງພຣະເຈົ້າເປັນປະຈຳ ເພື່ອນຳພາພວກເຂົາໃຫ້ຜ່ານສະພາບແວດລ້ອມຕ່າງໆ ແລະ ເຊັ່ນດຽວກັນນັ້ນ ທູດສະຫວັນກໍຈະປາກົດຢູ່ຕໍ່ໜ້າພວກເຂົາ. ຊາວອິດສະຣາເອນຈະຖືກເຮັດໃຫ້ສົມບູນໃນເວລາພຽງສອງສາມເດືອນເທົ່ານັ້ນ ຍ້ອນວ່າ ພວກເຂົາຈະບໍ່ໄດ້ຜ່ານຂັ້ນຕອນຂອງການກຳຈັດພິດຂອງມັງກອນແດງທີ່ຍິ່ງໃຫຍ່ອອກຈາກຕົວພວກເຂົາ, ມັນງ່າຍສຳລັບພວກເຂົາທີ່ຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ ພາຍໃຕ້ການຊີ້ນຳທີ່ຫຼາກຫຼາຍປະເພດ. ຈາກການພັດທະນາໃນອິດສະຣາເອນ ສາມາດເຫັນສະພາບຂອງຈັກກະວານທັງໝົດ ແລະ ນີ້ສະແດງໃຫ້ເຫັນວ່າ ຂັ້ນຕອນຂອງພາລະກິດຂອງພຣະເຈົ້າແມ່ນໄວສໍ່າໃດ. "ເຖິງເວລາແລ້ວ! ເຮົາຈະດຳເນີນພາລະກິດຂອງເຮົາ, ເຮົາຈະປົກຄອງເປັນກະສັດຂອງມວນມະນຸດ!" ໃນອະດີດ ພຣະເຈົ້າປົກຄອງຢູ່ໃນສະຫວັນເທົ່ານັ້ນ. ໃນປັດຈຸບັນ, ພຣະອົງແມ່ນປົກຄອງແຜ່ນດິນໂລກ; ພຣະເຈົ້າໄດ້ເອົາອຳນາດທັງໝົດຂອງພຣະອົງກັບຄືນ ແລະ ດ້ວຍເຫດນັ້ນ ມັນຈຶ່ງຖືກທຳນາຍວ່າ ມະນຸດທຸກຄົນຈະບໍ່ມີຊີວິດມະນຸດແບບປົກກະຕິອີກຕໍ່ໄປ ເນື່ອງຈາກພຣະເຈົ້າຈະຈັດລະບຽບສະຫວັນ ແລະ ແຜ່ນດິນໂລກຄືນໃໝ່ ແລະ ບໍ່ມີມະນຸດຄົນໃດໄດ້ຮັບອະນຸຍາດໃຫ້ແຊກແຊງ. ສະນັ້ນ, ພຣະເຈົ້າຈຶ່ງເຕືອນມະນຸດເປັນປະຈຳວ່າ: "ເຖິງເວລາແລ້ວ!" ເມື່ອຊາວອິດສະຣາເອນທຸກຄົນໄດ້ກັບຄືນສູ່ປະເທດຂອງພວກເຂົາ ນັ້ນກໍຄືເມື່ອມື້ທີ່ປະເທດອິດສະຣາເອນທັງໝົດໄດ້ຖືກຟື້ນຟູ ພາລະກິດອັນຍິ່ງໃຫຍ່ຂອງພຣະເຈົ້າກໍຈະສິ້ນສຸດລົງ. ຜູ້ຄົນທົ່ວຈັກກະວານຈະກະບົດ ແລະ ປະເທດຕ່າງໆທົ່ວຈັກກະວານຈະຕົກລົງຄືກັບດວງດາວໃນສະຫວັນໂດຍບໍ່ຮູ້ຕົວ; ທັນທີທັນໃດ ພວກເຂົາກໍຈະລົ້ມລະລາຍ. ຫຼັງຈາກຈັດການກັບພວກເຂົາແລ້ວ ພຣະເຈົ້າກໍຈະສ້າງອານາຈັກທີ່ເປັນທີ່ຮັກຂອງຫົວໃຈຂອງພຣະອົງ.

# ບົດທີ 28

ສະພາວະຂອງຜູ້ຄົນກໍຄື ຍິ່ງພວກເຂົາເຂົ້າໃຈພຣະທຳຂອງພຣະເຈົ້າໜ້ອຍສໍ່າໃດ, ພວກເຂົາກໍຍິ່ງສົງໄສກ່ຽວກັບວິທີການປະຕິບັດພາລະກິດໃນປັດຈຸບັນຂອງພຣະເຈົ້າຫຼາຍສໍ່ານັ້ນ. ແຕ່ສິ່ງນີ້ບໍ່ມີຜົນຕໍ່ພາລະກິດຂອງພຣະເຈົ້າ; ເມື່ອພຣະທຳຂອງພຣະອົງໄດ້ໄປເຖິງຈຸດໃດໜຶ່ງ, ຫົວໃຈຂອງຜູ້ຄົນຈະປ່ຽນແປງໂດຍທຳມະຊາດ. ໃນຊີວິດຂອງພວກເຂົາ, ທຸກຄົນຕັ້ງຈິດຕັ້ງໃຈໃສ່ພຣະທຳຂອງພຣະເຈົ້າ ແລະ ພວກເຂົາຍັງໄດ້ເລີ່ມຕົ້ນປາຖະໜາຫາພຣະທຳຂອງພຣະອົງ ແລະ ຍ້ອນການເປີດໂປງຢ່າງຕໍ່ເນື່ອງຂອງພຣະເຈົ້າ, ພວກເຂົາກໍເລີ່ມກຽດຊັງຕົນເອງ. ແຕ່ພຣະເຈົ້າຍັງໄດ້ກ່າວພຣະທຳຫຼາຍຂໍ້ດັ່ງຕໍ່ໄປນີ້: "ເມື່ອເຂົາເຂົ້າໃຈພຣະທຳທັງໝົດຂອງເຮົາຢ່າງທົ່ວເຖິງ, ວຸດທິພາວະຂອງມະນຸດກໍຖືກຕ້ອງເໝາະສົມກັບຄວາມປາຖະໜາຂອງເຮົາ ແລະ ຄຳຮ້ອງຂໍຂອງເຂົາກໍມີຜົນ ແລະ ບໍ່ໄດ້ສູນເປົ່າ ຫຼື ໄຮ້ປະໂຫຍດ; ເຮົາອວຍພອນກັບຄຳຮ້ອງຂໍຂອງມະນຸດຊາດທີ່ຈິງໃຈ ແລະ ສິ່ງເຫຼົ່ານັ້ນບໍ່ແມ່ນການທຳທ່າເຮັດ". ຕາມຄວາມຈິງແລ້ວ, ຜູ້ຄົນບໍ່ສາມາດເຂົ້າໃຈພຣະທຳຂອງພຣະເຈົ້າໄດ້ຢ່າງສົມບູນ, ພວກເຂົາພຽງແຕ່ສາມາດເຂົ້າໃຈແບບຜິວເຜີນ. ພຣະເຈົ້າພຽງແຕ່ໃຊ້ພຣະທຳເຫຼົ່ານີ້ເພື່ອໃຫ້ຈຸດປະສົງກັບພວກເຂົາໃນການສະແຫວງຫາ, ເພື່ອເຮັດໃຫ້ພວກເຂົາຮູ້ສຶກວ່າພຣະເຈົ້າບໍ່ໄດ້ຖືເບົາໃນສິ່ງຕ່າງໆ, ແຕ່ພຣະອົງຈິງໃຈກ່ຽວກັບພາລະກິດຂອງພຣະອົງ; ມີແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະມີຄວາມເຊື່ອໃນການສະແຫວງຫາ. ຍ້ອນທຸກຄົນພຽງແຕ່ອ້ອນວອນເພື່ອພວກເຂົາເອງ, ບໍ່ແມ່ນເພື່ອຄວາມປະສົງຂອງພຣະເຈົ້າ, ແຕ່ພຣະເຈົ້າບໍ່ໄດ້ຮ້ອນ ແລະ ໜາວ, ພຣະທຳຂອງພຣະອົງແມ່ນແນໃສ່ທຳມະຊາດຂອງມະນຸດ. ເຖິງແມ່ນຄົນສ່ວນໃຫຍ່ໃນປັດຈຸບັນອ້ອນວອນ, ພວກເຂົາກໍບໍ່ໄດ້ຈິງໃຈ, ມັນເປັນພຽງການທຳທ່າ. ສະພາວະຂອງທຸກຄົນກໍຄື "ພວກເຂົາພິຈາລະນາວ່າປາກຂອງເຮົາຄືຄວາມອຸດົມສົມບູນ. ທຸກຄົນປາຖະໜາທີ່ຈະໄດ້ຮັບບາງສິ່ງຈາກປາກຂອງເຮົາ. ບໍ່ວ່າມັນຈະເປັນຄວາມລັບຂອງລັດ ຫຼື ຄວາມເລິກລັບແຫ່ງສະຫວັນ ຫຼື ພະລັງຂອງໂລກຝ່າຍວິນຍານ ຫຼື ຈຸດໝາຍປາຍທາງຂອງມະນຸດຊາດ". ຍ້ອນຄວາມຢາກຮູ້ຢາກເຫັນຂອງພວກເຂົາ, ຜູ້ຄົນຈຶ່ງລ້ວນແລ້ວແຕ່ເຕັມໃຈທີ່ຈະຄົ້ນຫາສິ່ງເຫຼົ່ານີ້ ແລະ ບໍ່ປາຖະໜາທີ່ຈະຮັບເອົາຫຍັງເລີຍທີ່ເປັນການສະໜອງຊີວິດຈາກພຣະທຳຂອງພຣະເຈົ້າ. ສະນັ້ນ ພຣະເຈົ້າຈຶ່ງເວົ້າວ່າ "ມີຫຼາຍສິ່ງເກີນໄປທີ່ຂາດເຂີນໃນມະນຸດ: ເຂົາບໍ່ພຽງແຕ່ຕ້ອງການ 'ອາຫານເສີມທາງໂພສະນາການ', ແຕ່ຍິ່ງໄປກວ່ານັ້ນ ເຂົາຕ້ອງການ 'ການສະໜັບສະໜູນທາງຄວາມຄິດ' ແລະ 'ການສະໜອງທາງຝ່າຍວິນຍານ'". ມັນຄືແນວຄິດໃນຜູ້ຄົນທີ່ໄດ້ນຳພາໄປສູ່ຄວາມຄິດລົບໃນປັດຈຸບັນ ແລະ ມັນເປັນຍ້ອນສາຍຕາດ້ານກາຍະພາບຂອງພວກເຂົາທີ່ "ມີຄວາມເປັນສັກດີນາ" ຫຼາຍເກີນໄປ ຈຶ່ງບໍ່ມີຄວາມຫ້າວຫັນໃນສິ່ງທີ່ພວກເຂົາເວົ້າ ແລະ ເຮັດ ແລະ ພວກເຂົາຈຶ່ງເຮັດພໍເປັນພິທີ ແລະ ບໍ່ຮອບຄອບໃນທຸກໆສິ່ງ. ສິ່ງເຫຼົ່ານີ້ບໍ່ແມ່ນສະພາບຂອງຜູ້ຄົນບໍ? ຜູ້ຄົນບໍ່ຄວນຟ້າວ ແລະ ແກ້ໄຂສິ່ງນີ້ບໍ ແທນທີ່ຈະສືບຕໍ່ເຮັດສິ່ງທີ່ພວກເຂົາກຳລັງເຮັດຢູ່? ແມ່ນຫຍັງຄືຜົນປະໂຫຍດສຳລັບມະນຸດໃນການຮູ້ຈັກອະນາຄົດ? ເປັນຫຍັງຜູ້ຄົນຈຶ່ງມີປະຕິກິລິຍາຫຼັງຈາກທີ່ໄດ້ອ່ານພຣະທຳຂອງພຣະເຈົ້າບາງສ່ວນ, ແຕ່ສ່ວນທີ່ເຫຼືອຂອງພຣະທຳຂອງພຣະອົງນັ້ນແມ່ນບໍ່ມີຜົນກະທົບຫຍັງ

ເລີຍ? ເມື່ອພຣະເຈົ້າເວົ້າ, ຕົວຢ່າງເຊັ່ນ "ເຮົາສະໜອງການປິ່ນປົວຄວາມເຈັບປ່ວຍໃຫ້ກັບມະນຸດເພື່ອວ່າຈະບັນລຸຜົນທີ່ດີຂຶ້ນ, ເພື່ອວ່າທຸກຄົນຈະຖືກຟື້ນຟູສູ່ສຸຂະພາບທີ່ດີ ແລະ ເພື່ອວ່າພວກເຂົາຈະກັບຄືນສູ່ປົກກະຕິຍ້ອນການປິ່ນປົວຂອງເຮົາ", ພຣະທຳເຫຼົ່ານີ້ຈະບໍ່ມີຜົນໃນຜູ້ຄົນໄດ້ແນວໃດ? ທຸກສິ່ງທີ່ພຣະເຈົ້າເຮັດບໍ່ແມ່ນສິ່ງທີ່ມະນຸດຄວນບັນລຸບໍ? ພຣະເຈົ້າມີພາລະກິດໃຫ້ປະຕິບັດ, ເປັນຫຍັງຜູ້ຄົນຈຶ່ງບໍ່ມີເສັ້ນທາງໃຫ້ຍ່າງ? ສິ່ງນີ້ບໍ່ໄດ້ຂັດແຍ້ງກັບພຣະເຈົ້າບໍ? ຕາມຄວາມຈິງແລ້ວ ມີພາລະກິດຫຼາຍຢ່າງທີ່ຜູ້ຄົນຄວນປະຕິບັດ, ຕົວຢ່າງເຊັ່ນ ພວກເຂົາຮູ້ຈັກກ່ຽວກັບ "ມັງກອນແດງໃຫຍ່" ຫຼາຍສໍ່າໃດໃນພຣະທຳທີ່ວ່າ "ພວກເຈົ້າຊັງມັງກອນແດງໃຫຍ່ແທ້ບໍ?" ການທີ່ພຣະເຈົ້າເວົ້າວ່າ "ເປັນຫຍັງເຮົາຈຶ່ງຖາມພວກເຈົ້າຫຼາຍຄັ້ງ?" ໄດ້ສະແດງໃຫ້ເຫັນວ່າ ຜູ້ຄົນຍັງບໍ່ຮູ້ຈັກເຖິງທຳມະຊາດຂອງມັງກອນແດງໃຫຍ່ ແລະພວກເຂົາຍັງບໍ່ສາມາດລົງເລິກໄດ້ຫຼາຍກວ່ານີ້. ນີ້ບໍ່ແມ່ນພາລະກິດທີ່ມະນຸດຄວນປະຕິບັດຢ່າງແທ້ຈິງບໍ? ຈະສາມາດເວົ້າວ່າມະນຸດບໍ່ມີພາລະກິດໄດ້ແນວໃດ? ຖ້າສິ່ງນັ້ນເປັນຄວາມຈິງ, ແລ້ວແມ່ນຫຍັງຄືຄວາມສຳຄັນຂອງການບັງເກີດເປັນມະນຸດຂອງພຣະເຈົ້າ? ພຣະເຈົ້າກະທຳການໃນລັກສະນະທີ່ບໍ່ຮອບຄອບ ແລະ ເຮັດພໍເປັນພິທີຊື່ໆບໍ? ມັງກອນແດງໃຫຍ່ຈະສາມາດຖືກເອົາຊະນະໄດ້ດ້ວຍວິທີນີ້ບໍ?

ພຣະເຈົ້າເວົ້າວ່າ "ເຮົາໄດ້ເລີ່ມຕົ້ນແລ້ວ ແລະ ເຮົາຈະເລີ່ມຕົ້ນຂັ້ນຕອນທຳອິດຂອງພາລະກິດແຫ່ງການຂ້ຽນຕີຂອງເຮົາໃນສະຖານທີ່ຂອງມັງກອນແດງໃຫຍ່ອາໄສຢູ່". ພຣະທຳເຫຼົ່ານີ້ແມ່ນແນໃສ່ພາລະກິດທີ່ຢູ່ໃນຄວາມເປັນພຣະເຈົ້າ; ຜູ້ຄົນໃນປັດຈຸບັນໄດ້ເຂົ້າສູ່ການຂ້ຽນຕີລ່ວງໜ້າແລ້ວ ແລະສະນັ້ນ ພຣະເຈົ້າຈຶ່ງເວົ້າວ່າ ນີ້ແມ່ນຂັ້ນຕອນທຳອິດຂອງພາລະກິດຂອງພຣະອົງ. ພຣະອົງບໍ່ໄດ້ກຳລັງເຮັດໃຫ້ຜູ້ຄົນອົດກັ້ນຕໍ່ການຂ້ຽນຕີແຫ່ງໄພພິບັດ, ແຕ່ເປັນການຂ້ຽນຕີແຫ່ງພຣະທຳ. ຍ້ອນວ່າ ເມື່ອນໍ້າສຽງແຫ່ງພຣະທຳຂອງພຣະເຈົ້າປ່ຽນ, ຜູ້ຄົນກໍຈະໂງ່ຈ້າໄປໝົດ ແລະ ຫຼັງຈາກນັ້ນ ພວກເຂົາກໍຈະເຂົ້າສູ່ການຂ້ຽນຕີໝົດທຸກຄົນ. ເມື່ອໄດ້ຜ່ານການຂ້ຽນຕີ, "ພວກເຈົ້າຈົ່ງປະຕິບັດໜ້າທີ່ຂອງພວກເຈົ້າຢ່າງເປັນທາງການ ແລະ ຈົ່ງສັນລະເສີນເຮົາທົ່ວທັງແຜ່ນດິນຢ່າງເປັນທາງການ ຕະຫຼອດໄປເປັນນິດ!" ສິ່ງເຫຼົ່ານີ້ແມ່ນຂັ້ນຕອນໃນພາລະກິດຂອງພຣະເຈົ້າ, ພວກມັນຄືແຜນການຂອງພຣະອົງ. ຍິ່ງໄປກວ່ານັ້ນ, ປະຊາຊົນເຫຼົ່ານີ້ຂອງພຣະເຈົ້າຈະໄດ້ເຫັນເຖິງວິທີການທີ່ມັງກອນແດງໃຫຍ່ຖືກຂ້ຽນຕີດ້ວຍພວກເຂົາເອງ, ແລ້ວໄພອັນຮ້າຍແຮງກໍຈະເລີ່ມຕົ້ນຂຶ້ນຢູ່ພາຍນອກພວກເຂົາ, ໃນໂລກທີ່ຢູ່ອ້ອມພວກເຂົາຢ່າງເປັນທາງການ. ນີ້ແມ່ນໜຶ່ງໃນວິທີທີ່ພຣະເຈົ້າຊ່ວຍຜູ້ຄົນໃຫ້ລອດພົ້ນ. ພວກເຂົາຖືກຂ້ຽນຕີຢູ່ພາຍໃນ ແລະ ໄພອັນຮ້າຍແຮງເກີດຂຶ້ນຢູ່ພາຍນອກ ເຊິ່ງນີ້ໝາຍຄວາມວ່າ ພຣະທຳຂອງພຣະເຈົ້າຖືກເຮັດໃຫ້ສຳເລັດ. ສະນັ້ນ ຜູ້ຄົນຈະເລືອກທີ່ຈະຜ່ານການຂ້ຽນຕີຫຼາຍກວ່າໄພອັນຮ້າຍແຮງ ແລະ ມັນກໍຍ້ອນສິ່ງນີ້ ພວກເຂົາຈະຍັງຄົງຢູ່. ໃນມຸມໜຶ່ງ ນີ້ແມ່ນຈຸດທີ່ພາລະກິດຂອງພຣະເຈົ້າໄດ້ມາເຖິງ; ໃນອີກມຸມໜຶ່ງ ມັນເປັນຢ່າງນັ້ນກໍເພື່ອທຸກຄົນຈະຮູ້ຈັກອຸປະນິໄສຂອງພຣະເຈົ້າ. ສະນັ້ນພຣະເຈົ້າຈຶ່ງເວົ້າວ່າ "ເວລາທີ່ປະຊາຊົນຂອງເຮົາມີຄວາມສຸກກັບເຮົາກໍເປັນເວລາທີ່ມັງກອນແດງໃຫຍ່ຖືກຂ້ຽນຕີ. ການເຮັດໃຫ້ປະຊາຊົນຂອງມັງກອນແດງໃຫຍ່ລຸກຂຶ້ນ ແລະ ກະບົດຕໍ່ມັນແມ່ນແຜນການຂອງເຮົາ ແລະ ນີ້ເປັນວິທີທີ່ເຮົາຈະເຮັດໃຫ້ປະຊາຊົນຂອງເຮົາສົມບູນ ແລະ ມັນເປັນໂອກາດທີ່ຍິ່ງໃຫຍ່

ສຳລັບປະຊາຊົນຂອງເຮົາທຸກຄົນທີ່ຈະເຕີບໃຫຍ່ໃນຊີວິດ". ເປັນຫຍັງພຣະເຈົ້າຈຶ່ງເວົ້າພຣະທຳເຫຼົ່ານີ້ ແລະ ເຖິງຢ່າງນັ້ນພຣະທຳເຫຼົ່ານີ້ກໍບໍ່ໄດ້ດຶງດູດຄວາມສົນໃຈຂອງຜູ້ຄົນ?

ຫຼາຍປະເທດແມ່ນຢູ່ໃນຄວາມບໍ່ເປັນລະບຽບ, ເພາະວ່າ ໄມ້ຄ້ອນຂອງພຣະເຈົ້າໄດ້ເລີ່ມເຮັດໜ້າທີ່ຂອງມັນເທິງແຜ່ນດິນໂລກ. ພາລະກິດຂອງພຣະເຈົ້າສາມາດເຫັນໄດ້ຢູ່ໃນສະພາບຂອງແຜ່ນດິນໂລກ. ເມື່ອພຣະເຈົ້າເວົ້າວ່າ "ນ້ຳຈະແຜດສຽງດັງກ້ອງ, ພູເຂົາຈະພັງທະລາຍລົງ, ແມ່ນ້ຳທີ່ຍິ່ງໃຫຍ່ຈະແຕກສະຫຼາຍ", ນີ້ແມ່ນພາລະກິດເບື້ອງຕົ້ນຂອງໄມ້ຄ້ອນເທິງແຜ່ນດິນໂລກ, ດ້ວຍຜົນຕາມມາກໍຄື "ທຸກຄົວເຮືອນເທິງແຜ່ນດິນໂລກຈະຖືກເຮັດໃຫ້ແຕກອອກຈາກກັນ ແລະ ປະຊາຊາດທັງປວງເທິງແຜ່ນດິນໂລກຈະຖືກເຮັດໃຫ້ແຕກຂາດສະບັ້ນ; ມື້ທີ່ຜົວ ແລະ ເມຍຈະກັບຄືນຫາກັນແມ່ນຈະຫາຍຈາກໄປ, ແມ່ ແລະ ລູກຊາຍຈະບໍ່ໄດ້ພົບກັນອີກຕໍ່ໄປ, ຈະບໍ່ມີການຢູ່ຮ່ວມກັນລະຫວ່າງພໍ່ ແລະ ລູກສາວອີກຕໍ່ໄປ. ທຸກສິ່ງທີ່ເຄີຍຢູ່ເທິງແຜ່ນດິນໂລກຈະຖືກເຮົາເຮັດໃຫ້ແຕກຫັກ". ສິ່ງດັ່ງກ່າວຈະເປັນສະພາວະທົ່ວໄປຂອງຄອບຄົວເທິງແຜ່ນດິນໂລກ. ໂດຍທຳມະຊາດແລ້ວ, ມັນບໍ່ສາມາດເປັນສະພາວະຂອງພວກເຂົາທຸກຄົນ, ແຕ່ເປັນສະພາວະຂອງພວກເຂົາສ່ວນໃຫຍ່. ໃນມຸມໜຶ່ງ, ມັນກຳລັງໝາຍເຖິງສະຖານະການທີ່ຜູ້ຄົນໃນກະແສນີ້ຈະຜະເຊີນໃນອະນາຄົດ. ມັນໄດ້ທຳນາຍໄວ້ລ່ວງໜ້າວ່າ ຫຼັງຈາກທີ່ພວກເຂົາໄດ້ຜ່ານການຂ້ຽນຕີແຫ່ງພຣະທຳ ແລະ ຜູ້ທີ່ບໍ່ເຊື່ອໄດ້ຕົກຢູ່ໃນໄພອັນຮ້າຍແຮງ, ມັນຈະບໍ່ມີຄວາມສຳພັນໃນຄອບຄົວທ່າມກາງຜູ້ຄົນເທິງແຜ່ນດິນໂລກອີກຕໍ່ໄປ; ພວກເຂົາທຸກຄົນຈະເປັນປະຊາຊົນແຫ່ງຊີນີມ ແລະ ທຸກຄົນຈະຊື່ສັດໃນອານາຈັກຂອງພຣະເຈົ້າ. ສະນັ້ນ ມື້ທີ່ຜົວ ແລະ ເມຍຈະກັບຄືນຫາກັນແມ່ນຈະຫາຍຈາກໄປ, ແມ່ ແລະ ລູກຊາຍຈະບໍ່ໄດ້ພົບກັນອີກຕໍ່ໄປ, ຈະບໍ່ມີການຢູ່ຮ່ວມກັນລະຫວ່າງພໍ່ ແລະ ລູກສາວອີກຕໍ່ໄປ. ສະນັ້ນ ຄອບຄົວຂອງຜູ້ຄົນເທິງແຜ່ນດິນໂລກຈະແຕກຂາດອອກຈາກກັນ, ແຕກຂາດອອກເປັນເສດສ່ວນນ້ອຍໆ ແລະ ນີ້ຈະເປັນພາລະກິດສຸດທ້າຍທີ່ພຣະເຈົ້າປະຕິບັດໃນມະນຸດ. ຍ້ອນພຣະເຈົ້າຈະເຜີຍແຜ່ພາລະກິດນີ້ທົ່ວທັງຈັກກະວານ, ພຣະອົງຈຶ່ງຖືເອົາໂອກາດນີ້ອະທິບາຍຄຳວ່າ "ຄວາມຮູ້ສຶກ" ໃຫ້ຜູ້ຄົນເຂົ້າໃຈ, ເພື່ອເຮັດໃຫ້ພວກເຂົາເຫັນວ່າ ຄວາມປະສົງຂອງພຣະເຈົ້າແມ່ນການເຮັດໃຫ້ຄອບຄົວຂອງທຸກຄົນແຕກຂາດອອກຈາກກັນ ແລະ ສະແດງໃຫ້ເຫັນວ່າພຣະເຈົ້າໃຊ້ການຂ້ຽນຕີເພື່ອແກ້ໄຂ "ຂໍ້ຂັດແຍ້ງຕ່າງໆໃນຄອບຄົວ" ທ່າມກາງມະນຸດຊາດ. ຖ້າບໍ່ດັ່ງນັ້ນ ມັນກໍຈະບໍ່ມີທາງທີ່ຈະນຳສ່ວນສຸດທ້າຍຂອງພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກໄປສູ່ຈຸດຈົບ. ສ່ວນສຸດທ້າຍຂອງພຣະທຳຂອງພຣະເຈົ້າເປີດເຜີຍຈຸດອ່ອນທີ່ໃຫຍ່ທີ່ສຸດຂອງມະນຸດຊາດ, ພວກເຂົາທຸກຄົນດຳລົງຊີວິດໃນຄວາມຮູ້ສຶກ ແລະ ສະນັ້ນ ພຣະເຈົ້າຈຶ່ງບໍ່ຫຼີກເວັ້ນພວກເຂົາແມ່ນແຕ່ຄົນດຽວ ແລະ ເປີດໂປງຄວາມລັບທີ່ລີ້ຢູ່ໃນຫົວໃຈຂອງມະນຸດຊາດທັງປວງ. ເປັນຫຍັງມັນຈຶ່ງຍາກທີ່ຈະໃຫ້ຜູ້ຄົນແຍກຕົນເອງອອກຈາກຄວາມຮູ້ສຶກ? ການເຮັດສິ່ງດັ່ງກ່າວເໜືອກວ່າມາດຕະຖານຂອງຄວາມສຳນຶກບໍ? ຄວາມສຳນຶກສາມາດເຮັດໃຫ້ຄວາມປະສົງຂອງພຣະເຈົ້າສຳເລັດບໍ? ຄວາມຮູ້ສຶກສາມາດຊ່ວຍໃຫ້ຜູ້ຄົນຜ່ານຄວາມຍາກລຳບາກໄປໄດ້ບໍ? ໃນສາຍຕາຂອງພຣະເຈົ້າ, ຄວາມຮູ້ສຶກແມ່ນສັດຕູຂອງພຣະອົງ, ສິ່ງນີ້ບໍ່ໄດ້ຖືກລະບຸຢ່າງຊັດເຈນໃນພຣະທຳຂອງພຣະເຈົ້າບໍ?

# ບົດທີ 29

ໃນບັນດາພາລະກິດທີ່ຜູ້ຄົນປະຕິບັດ, ພາລະກິດບາງຢ່າງແມ່ນຖືກປະຕິບັດດ້ວຍຄຳສັ່ງມາຈາກພຣະເຈົ້າໂດຍກົງ, ແຕ່ຍັງມີສ່ວນໜຶ່ງຂອງພາລະກິດທີ່ ພຣະເຈົ້າບໍ່ໄດ້ໃຫ້ຄຳສັ່ງແບບສະເພາະ, ນີ້ແມ່ນພຽງພໍທີ່ຈະສະແດງໃຫ້ເຫັນວ່າສິ່ງທີ່ພຣະເຈົ້າໄດ້ປະຕິບັດໃນປັດຈຸບັນແມ່ນຍັງບໍ່ຖືກເປີດເຜີຍຢ່າງຄົບຖ້ວນເທື່ອ ເຊິ່ງໝາຍຄວາມວ່າ ພາລະກິດຫຼາຍຢ່າງຍັງລີ້ລັບ ແລະ ຍັງບໍ່ໄດ້ຖືກເປີດເຜີຍເທື່ອ. ເຖິງຢ່າງໃດກໍຕາມ, ບາງສິ່ງຈຳເປັນຕ້ອງຖືກເຮັດໃຫ້ເປີດເຜີຍ ໃນຂະນະທີ່ສິ່ງອື່ນໆຈຳເປັນຕ້ອງປ່ອຍໃຫ້ຜູ້ຄົນມືດມົວ ແລະ ສັບສົນ; ນີ້ແມ່ນສິ່ງທີ່ຖືກຮຽກຮ້ອງໂດຍພາລະກິດຂອງພຣະເຈົ້າ. ຕົວຢ່າງເຊັ່ນ ການມາເຖິງຂອງພຣະເຈົ້າຈາກສະຫວັນທ່າມກາງມະນຸດ: ພຣະອົງມາຮອດໄດ້ແນວໃດ, ພຣະອົງມາຮອດຕອນຈັກວິນາທີ ຫຼື ສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງໄດ້ຜ່ານການປ່ຽນແປງ ຫຼື ຍັງ, ສິ່ງເຫຼົ່ານີ້ເຮັດໃຫ້ຜູ້ຄົນສັບສົນ. ສິ່ງນີ້ຍັງອີງຕາມສະຖານະການຕົວຈິງ, ຍ້ອນເນື້ອໜັງຂອງມະນຸດເອງແມ່ນບໍ່ສາມາດເຂົ້າສູ່ອານາຈັກຝ່າຍວິນຍານໄດ້ໂດຍກົງ. ສະນັ້ນ ເຖິງແມ່ນພຣະເຈົ້າກ່າວຢ່າງຊັດເຈນວ່າ ພຣະອົງມາຈາກສະຫວັນສູ່ແຜ່ນດິນໂລກໄດ້ແນວໃດ ຫຼື ເມື່ອພຣະອົງເວົ້າວ່າ "ໃນມື້ທີ່ທຸກສິ່ງຖືກເຮັດໃຫ້ຟື້ນຄືນຊີບ, ເຮົາໄດ້ລົງມາຢູ່ທ່າມກາງມະນຸດ ແລະ ເຮົາໄດ້ໃຊ້ເວລາທັງກາງເວັນ ແລະ ກາງຄືນຢ່າງມະຫັດສະຈັນກັບເຂົາ", ພຣະທຳດັ່ງກ່າວເປັນຄືກັບວ່າບາງຄົນກຳລັງເວົ້າກັບຕົ້ນໄມ້, ບໍ່ມີປະຕິກິລິຍາແມ່ນແຕ່ໜ້ອຍດຽວ, ຍ້ອນຜູ້ຄົນບໍ່ມີຄວາມຮູ້ກ່ຽວກັບຂັ້ນຕອນຕ່າງໆຂອງພາລະກິດຂອງພຣະເຈົ້າ. ເຖິງແມ່ນພວກເຂົາຈະຮູ້ຈັກຢ່າງແທ້ຈິງ, ພວກເຂົາກໍຍັງເຊື່ອວ່າພຣະເຈົ້າບິນຈາກສະຫວັນລົງສູ່ແຜ່ນດິນໂລກຄືກັບນາງຟ້າ ແລະ ເກີດທ່າມກາງມະນຸດ. ນີ້ແມ່ນສິ່ງທີ່ຄວາມຄິດຂອງມະນຸດສາມາດຢັ່ງເຖິງ. ມັນເປັນຍ້ອນທາດແທ້ຂອງມະນຸດ ທີ່ເຮັດໃຫ້ເຂົາບໍ່ສາມາດເຂົ້າໃຈທາດແທ້ຂອງພຣະເຈົ້າ ແລະ ບໍ່ສາມາດເຂົ້າໃຈຄວາມເປັນຈິງຂອງອານາຈັກຝ່າຍວິນຍານ. ດ້ວຍທາດແທ້ຂອງພວກເຂົາ, ຜູ້ຄົນຈຶ່ງບໍ່ສາມາດເຮັດໜ້າທີ່ເປັນແບບຢ່າງໃຫ້ກັບຄົນອື່ນໄດ້, ຍ້ອນໂດຍທຳມະຊາດແລ້ວ ຜູ້ຄົນຄືກັນໝົດ ແລະ ບໍ່ໄດ້ແຕກຕ່າງກັນ. ສະນັ້ນການຂໍໃຫ້ຜູ້ຄົນເປັນແບບຢ່າງໃຫ້ຄົນອື່ນປະຕິບັດຕາມ ຫຼື ເຮັດໜ້າທີ່ເປັນແບບຢ່າງແມ່ນເປັນຄືຟອງສະບູ, ມັນກາຍເປັນອາຍນໍ້າ. ໃນຂະນະທີ່ເມື່ອພຣະເຈົ້າເວົ້າວ່າ "ການຮັບຄວາມຮູ້ບາງຢ່າງໃນສິ່ງທີ່ເຮົາມີ ແລະ ເປັນ", ພຣະທຳເຫຼົ່ານີ້ພຽງແຕ່ກ່າວເຖິງການສະແດງອອກຂອງພາລະກິດທີ່ພຣະເຈົ້າປະຕິບັດໃນເນື້ອໜັງ; ເວົ້າອີກຢ່າງໜຶ່ງກໍຄື ພຣະທຳເຫຼົ່ານີ້ແນໃສ່ໜ້າຕາທີ່ແທ້ຈິງຂອງພຣະເຈົ້າ, ຄວາມສັກສິດ ເຊິ່ງໝາຍເຖິງອຸປະນິໄສທີ່ສັກສິດຂອງພຣະອົງ. ນັ້ນໝາຍຄວາມວ່າ ຜູ້ຄົນຖືກຮຽກຮ້ອງໃຫ້ເຂົ້າໃຈສິ່ງຕ່າງໆເຊັ່ນວ່າ ເປັນຫຍັງພຣະເຈົ້າຈຶ່ງປະຕິບັດພາລະກິດໃນລັກສະນະນີ້, ແມ່ນຫຍັງຄືສິ່ງທີ່ໄດ້ສຳເລັດໂດຍພຣະທຳຂອງພຣະເຈົ້າ, ແມ່ນຫຍັງຄືສິ່ງທີ່ພຣະເຈົ້າປາຖະໜາເພື່ອບັນລຸເທິງແຜ່ນດິນໂລກ, ແມ່ນຫຍັງຄືສິ່ງທີ່ພຣະອົງປາຖະໜາຮັບເອົາທ່າມກາງມະນຸດ, ວິທີການທີ່ພຣະເຈົ້າກ່າວ ແລະ ແມ່ນຫຍັງຄືທັດສະນະຄະຕິທີ່ພຣະເຈົ້າມີຕໍ່ມະນຸດ. ສາມາດເວົ້າໄດ້ວ່າ ບໍ່ມີຫຍັງໃນມະນຸດທີ່ສົມຄວນແກ່ການອວດໂອ້ນັ້ນກໍຄື ບໍ່ມີຫຍັງໃນຕົວເຂົາທີ່ສາມາດເປັນແບບຢ່າງໃຫ້ຄົນອື່ນປະຕິບັດຕາມໄດ້ເລີຍ.

ມັນເປັນຍ້ອນຄວາມປົກກະຕິຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ ແລະ ຍ້ອນຄວາມແຕກຕ່າງລະຫວ່າງພຣະເຈົ້າທີ່ຢູ່ໃນສະຫວັນ ແລະ ພຣະເຈົ້າທີ່ຢູ່ໃນເນື້ອໜັງ ຜູ້ທີ່ເບິ່ງຄືກັບວ່າບໍ່ໄດ້ເກີດຈາກພຣະເຈົ້າທີ່ຢູ່ໃນສະຫວັນ, ພຣະເຈົ້າຈຶ່ງເວົ້າວ່າ "ເປັນເວລາຫຼາຍປີທີ່ເຮົາໄດ້ຍ່າງຜ່ານທ່າມກາງມະນຸດ, ແຕ່ເຂົາກໍຍັງບໍ່ຮູ້ສຶກຕົວສະເໝີ ແລະ ບໍ່ຮູ້ຈັກເຮົາຈັກເທື່ອ". ພຣະເຈົ້າຍັງເວົ້າວ່າ "ເມື່ອບາດກ້າວຂອງເຮົາກ້າວໄປຂ້າມຈັກກະວານ ແລະ ສິ້ນປາຍຂອງແຜ່ນດິນໂລກ, ມະນຸດຈະເລີ່ມໄຕ່ຕອງກ່ຽວກັບຕົນເອງ ແລະ ທຸກຄົນຈະມາຫາເຮົາ ແລະ ກົ້ມລົງຕໍ່ໜ້າເຮົາ ແລະ ນະມັດສະການເຮົາ. ນີ້ຈະເປັນມື້ທີ່ເຮົາໄດ້ຮັບສະຫງ່າລາສີ, ມື້ທີ່ເຮົາກັບມາ ແລະ ຍັງເປັນມື້ທີ່ເຮົາຈາກໄປອີກດ້ວຍ". ນີ້ແມ່ນມື້ທີ່ໜ້າຕາແທ້ຈິງຂອງພຣະເຈົ້າສະແດງຕໍ່ມະນຸດ. ແຕ່ເຖິງເປັນເຊັ່ນນັ້ນ ພຣະເຈົ້າກໍບໍ່ໄດ້ຊັກຊ້າພາລະກິດຂອງພຣະອົງ ແລະ ພຣະອົງພຽງແຕ່ປະຕິບັດພາລະກິດທີ່ຄວນປະຕິບັດ. ເມື່ອພຣະອົງພິພາກສາ, ພຣະອົງກ່າວໂທດຜູ້ຄົນບົນພື້ນຖານທັດສະນະຄະຕິຂອງພວກເຂົາທີ່ມີຕໍ່ພຣະເຈົ້າໃນເນື້ອໜັງ. ນີ້ແມ່ນໜຶ່ງໃນຫົວຂໍ້ຫຼັກແຫ່ງຖ້ອຍຄຳຂອງພຣະເຈົ້າໃນລະຫວ່າງເວລານີ້. ຕົວຢ່າງເຊັ່ນ ພຣະເຈົ້າເວົ້າວ່າ "ເຮົາໄດ້ເລີ່ມຕົ້ນພາລະກິດຂອງເຮົາທ່າມກາງມະນຸດທັງປວງ, ເລີ່ມລົງມືເຮັດຢ່າງເປັນທາງການ, ທົ່ວຈັກກະວານທັງປວງ ແລະ ໃນຂັ້ນສຸດທ້າຍຂອງແຜນການຄຸ້ມຄອງຂອງເຮົາ. ຈາກຊ່ວງເວລານີ້ເປັນຕົ້ນໄປ, ໃຜກໍຕາມທີ່ບໍ່ລະມັດລະວັງຈະຖືກໂຍນລົງທ່າມກາງການຂ້ຽນຕີທີ່ໂຫດຮ້າຍ ແລະ ສິ່ງນີ້ອາດເກີດຂຶ້ນໄດ້ທຸກເວລາ". ນີ້ແມ່ນເນື້ອຫາຂອງແຜນການຂອງພຣະເຈົ້າ ແລະ ມັນບໍ່ແມ່ນສິ່ງທີ່ແປກ ຫຼື ປະຫຼາດ, ແຕ່ລ້ວນແລ້ວແຕ່ເປັນສ່ວນໜຶ່ງຂອງຂັ້ນຕອນຂອງພາລະກິດຂອງພຣະອົງ. ໃນຂະນະດຽວກັນ ຜູ້ຄົນ ແລະ ລູກຊາຍຂອງພຣະເຈົ້າທີ່ຢູ່ຕ່າງປະເທດຖືກພິພາກສາໂດຍພຣະເຈົ້າບົນພື້ນຖານສິ່ງຕ່າງໆທີ່ພວກເຂົາປະຕິບັດໃນຄຣິສຕະຈັກ ແລະ ສະນັ້ນ ພຣະເຈົ້າຈຶ່ງກ່າວວ່າ "ເມື່ອເຮົາປະຕິບັດພາລະກິດ, ທູດສະຫວັນທຸກຕົນກໍເລີ່ມຕົ້ນຕໍ່ສູ້ຢ່າງຊີ້ຂາດໄປກັບເຮົາ ແລະ ຕັ້ງໃຈເຮັດໃຫ້ຄວາມປາຖະໜາຂອງເຮົາສຳເລັດໃນຂັ້ນຕອນສຸດທ້າຍ, ເພື່ອວ່າຜູ້ຄົນເທິງແຜ່ນດິນໂລກຈະຍອມຢູ່ຕໍ່ໜ້າເຮົາຄືກັບທູດສະຫວັນ ແລະ ບໍ່ມີຄວາມປາຖະໜາທີ່ຈະຕໍ່ຕ້ານເຮົາ ແລະ ບໍ່ເຮັດສິ່ງໃດທີ່ເປັນການກະບົດຕໍ່ເຮົາ. ສິ່ງເຫຼົ່ານີ້ແມ່ນພະລັງຂອງພາລະກິດຂອງເຮົາທົ່ວທັງຈັກກະວານ". ນີ້ແມ່ນຄວາມແຕກຕ່າງໃນພາລະກິດທີ່ພຣະເຈົ້າປະຕິບັດທົ່ວແຜ່ນດິນໂລກ; ພຣະອົງໃຊ້ມາດຕະການທີ່ແຕກຕ່າງກັນອີງຕາມພາລະກິດໃນແຕ່ລະບຸກຄົນ. ໃນປັດຈຸບັນຜູ້ຄົນຂອງຄຣິສຕະຈັກລ້ວນແລ້ວແຕ່ມີຫົວໃຈທີ່ປາຖະໜາ ແລະ ພວກເຂົາໄດ້ເລີ່ມຕົ້ນກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ເຊິ່ງກໍພຽງພໍທີ່ຈະສະແດງໃຫ້ເຫັນວ່າພາລະກິດຂອງພຣະອົງກຳລັງເຂົ້າໃກ້ຈຸດສິ້ນສຸດຂອງມັນແລ້ວ. ເມື່ອຫຼຽວເບິ່ງຈາກທ້ອງຟ້າ ຄືກັບໄດ້ຫຼຽວເບິ່ງພາບອັນເສົ້າໝອງຂອງງ່າໄມ້ທີ່ຫ່ຽວແຫ້ງ ແລະ ໃບໄມ້ຫຼົ່ນອີກຄັ້ງ, ຝຸ່ນເຫຼືອງພັດປິວໂດຍລົມໃນລະດູໃບໄມ້ຫຼົ່ນ. ມັນຮູ້ສຶກຄືກັບໂລກພິນາດກຳລັງຈະເກີດຂຶ້ນທ່າມກາງມະນຸດ, ຄືກັບວ່າມັນກຳລັງຈະປ່ຽນເປັນຄວາມວ່າງເປົ່າ. ບາງເທື່ອເປັນຍ້ອນຄວາມອ່ອນໄຫວຂອງພຣະວິນຍານ, ມີຄວາມຮູ້ສຶກວ່າບໍ່ມີຄວາມສຸກໃນຫົວໃຈຢູ່ສະເໝີ ແຕ່ກໍມີເສດສ່ວນຂອງຄວາມສະບາຍທີ່ງຽບສະຫງົບ, ເຖິງວ່າສິ່ງນີ້ຈະຍັງມີຄວາມໂສກເສົ້າບາງຢ່າງ. ນີ້ຄືການພັນລະນາເຖິງພຣະທຳຂອງພຣະເຈົ້າທີ່ວ່າ "ມະນຸດກຳລັງຕື່ນຂຶ້ນ, ທຸກສິ່ງເທິງແຜ່ນດິນໂລກ

ແມ່ນຢູ່ໃນຄວາມເປັນລະບຽບ ແລະ ມື້ແຫ່ງການຢູ່ລອດຂອງແຜ່ນດິນໂລກແມ່ນບໍ່ມີອີກ, ຍ້ອນວ່າ ເຮົາໄດ້ກັບມາແລ້ວ!" ຜູ້ຄົນອາດເປັນຄົນຄິດລົບພໍສົມຄວນຫຼັງຈາກທີ່ໄດ້ຍິນພຣະທຳເຫຼົ່ານີ້ ຫຼື ພວກເຂົາ ອາດຜິດຫວັງໜ້ອຍໜຶ່ງກັບພາລະກິດຂອງພຣະເຈົ້າ ຫຼື ພວກເຂົາອາດໃສ່ໃຈກັບຄວາມຮູ້ສຶກໃນ ຈິດວິນຍານຂອງພວກເຂົາຫຼາຍຂຶ້ນ. ແຕ່ກ່ອນຈະສຳເລັດພາລະກິດຂອງພຣະອົງເທິງແຜ່ນດິນໂລກ, ເປັນໄປບໍ່ໄດ້ທີ່ພຣະເຈົ້າຈະໂງ່ຈົນເຖິງກັບສ້າງພາບລວງຕາບາງຢ່າງໃຫ້ກັບຜູ້ຄົນ. ຖ້າເຈົ້າມີຄວາມຮູ້ສຶກ ແບບນັ້ນແທ້, ແລ້ວມັນກໍສະແດງໃຫ້ເຫັນວ່າເຈົ້າໃສ່ໃຈກັບຄວາມຮູ້ສຶກຂອງເຈົ້າຫຼາຍເກີນໄປ, ເຈົ້າ ເປັນຄົນທີ່ເຮັດຕາມໃຈຕົນເອງ ແລະ ບໍ່ໄດ້ຮັກພຣະເຈົ້າ; ມັນສະແດງໃຫ້ເຫັນວ່າ ຄົນປະເພດດັ່ງກ່າວ ໃສ່ໃຈກັບສິ່ງທີ່ເໜືອທຳມະຊາດຫຼາຍເກີນໄປ ແລະ ບໍ່ໃສ່ໃຈກັບພຣະເຈົ້າເລີຍ. ຍ້ອນມືຂອງພຣະເຈົ້າ, ບໍ່ວ່າຜູ້ຄົນຈະພະຍາຍາມຫຼົບໜີເທົ່າໃດ, ພວກເຂົາກໍບໍ່ສາມາດຫຼົບໜີຈາກສະຖານະການນີ້ໄດ້. ຜູ້ໃດ ສາມາດຫຼົບໜີຈາກມືຂອງພຣະເຈົ້າໄດ້ແດ່? ເມື່ອໃດທີ່ສະຖານະ ແລະ ສະຖານະການຂອງເຈົ້າບໍ່ໄດ້ຖືກ ຈັດແຈງໂດຍພຣະເຈົ້າ? ບໍ່ວ່າເຈົ້າທົນທຸກ ຫຼື ໄດ້ຮັບພອນ, ເຈົ້າຈະໜີພົ້ນຈາກກຳມືຂອງພຣະເຈົ້າໄດ້ ແນວໃດ? ນີ້ບໍ່ແມ່ນບັນຫາຂອງມະນຸດ, ແຕ່ມັນກ່ຽວກັບຄວາມຕ້ອງການຂອງພຣະເຈົ້າທັງໝົດ, ຜູ້ໃດຈະສາມາດບໍ່ເຊື່ອຟັງຍ້ອນສິ່ງນີ້ໄດ້?

"ເຮົາຈະໃຊ້ການຂ້ຽນຕີເພື່ອເຜີຍແຜ່ພາລະກິດຂອງເຮົາທ່າມກາງຄົນຕ່າງຊາດ, ນັ້ນໝາຍຄວາມວ່າ ເຮົາຈະໃຊ້ກຳລັງຕໍ່ທຸກຄົນທີ່ເປັນຄົນຕ່າງຊາດ. ໂດຍທຳມະຊາດແລ້ວ ພາລະກິດນີ້ຈະຖືກປະຕິບັດ ໃນເວລາດຽວກັບພາລະກິດຂອງເຮົາທ່າມກາງຄົນຖືກເລືອກ". ດ້ວຍຖ້ອຍຄຳຂອງພຣະທຳເຫຼົ່ານີ້, ພຣະເຈົ້າໄດ້ເລີ່ມລົງມືປະຕິບັດພາລະກິດນີ້ທົ່ວທັງຈັກກະວານ. ນີ້ແມ່ນຂັ້ນຕອນຂອງພາລະກິດຂອງ ພຣະເຈົ້າ ເຊິ່ງໄດ້ຄືບໜ້າຈົນມາເຖິງຈຸດນີ້ແລ້ວ; ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້. ໄພຮ້າຍແຮງຈະກຳ ຈັດສ່ວນໜຶ່ງຂອງມະນຸດຊາດ, ເຮັດໃຫ້ພວກເຂົາຈິບຫາຍໄປພ້ອມກັບແຜ່ນດິນໂລກ. ເມື່ອຈັກກະວານ ຖືກຂ້ຽນຕີຢ່າງເປັນທາງການ, ພຣະເຈົ້າຈະປາກົດຕົວຕໍ່ທຸກຄົນຢ່າງເປັນທາງການ. ຍ້ອນການປາກົດຕົວ ຂອງພຣະອົງ ຜູ້ຄົນຈຶ່ງຖືກຂ້ຽນຕີ. ຍິ່ງໄປກວ່ານັ້ນ ພຣະເຈົ້າຍັງເວົ້າວ່າ "ເມື່ອເຮົາມາຍໜັງສືມ້ວນອອກ ຢ່າງເປັນທາງການກໍຄືເວລາທີ່ຜູ້ຄົນທົ່ວທັງຈັກກະວານຖືກຂ້ຽນຕີ, ແມ່ນເວລາທີ່ທຸກຄົນທົ່ວແຜ່ນດິນ ໂລກຕົກຢູ່ໃນການທົດລອງ". ຈາກສິ່ງນີ້ ສາມາດເຫັນໄດ້ຢ່າງຊັດເຈນວ່າ ເນື້ອຄວາມຂອງຕາປະທັບ ທັງເຈັດແມ່ນເນື້ອຄວາມຂອງການຂ້ຽນຕີ ເຊິ່ງໝາຍຄວາມວ່າ ມີໄພພິບັດພາຍໃນຕາປະທັບທັງເຈັດ. ສະນັ້ນ ໃນປັດຈຸບັນ ຕາປະທັບທັງເຈັດຍັງບໍ່ທັນຖືກເປີດອອກເທື່ອ; "ການທົດລອງ" ທີ່ໝາຍເຖິງໃນນີ້ ແມ່ນການຂ້ຽນຕີທີ່ມະນຸດຕ້ອງທົນທຸກ ແລະ ທ່າມກາງການຂ້ຽນຕີ ຄົນກຸ່ມໜຶ່ງຈະຖືກຮັບເອົາ ເຊິ່ງເປັນຜູ້ທີ່ຍອມຮັບເອົາ "ໃບຢັ້ງຢືນ" ທີ່ພຣະເຈົ້າມອບໃຫ້ຢ່າງເປັນທາງການ ແລະ ສະນັ້ນ ພວກເຂົາ ກໍຈະເປັນຄົນໃນອານາຈັກຂອງພຣະເຈົ້າ. ສິ່ງເຫຼົ່ານີ້ແມ່ນຕົ້ນກຳເນີດຂອງບຸດຊາຍ ແລະ ປະຊາຊົນຂອງ ພຣະເຈົ້າ ແລະ ໃນປັດຈຸບັນ ພວກເຂົາຍັງບໍ່ທັນໄດ້ຖືກຕັດສິນເທື່ອ ແລະ ພຽງແຕ່ວ່າງພື້ນຖານສຳລັບ ປະສົບການໃນອະນາຄົດ. ຖ້າບາງຄົນມີຊີວິດທີ່ແທ້ຈິງ, ພວກເຂົາກໍຈະສາມາດຍຶດໝັ້ນໃນລະຫວ່າງ ການທົດລອງ ແລະ ຖ້າພວກເຂົາປາສະຈາກຊີວິດ ແລ້ວສິ່ງນີ້ກໍພຽງພໍທີ່ຈະພິສູດວ່າພາລະກິດຂອງ

ພຣະເຈົ້າບໍ່ມີຜົນກະທົບໃນພວກເຂົາ, ພວກເຂົາຕົກເບັດໃນນໍ້າຂຸ່ນ ແລະ ບໍ່ໃສ່ໃຈໃນພຣະທຳຂອງພຣະເຈົ້າ. ເພາະນີ້ແມ່ນພາລະກິດຂອງຍຸກສຸດທ້າຍ, ເຊິ່ງເປັນການນຳຍຸກນີ້ໄປສູ່ຈຸດສຸດທ້າຍ ແທນທີ່ຈະສືບຕໍ່ພາລະກິດ, ສະນັ້ນ ພຣະເຈົ້າຈຶ່ງເວົ້າວ່າ "ເວົ້າອີກຢ່າງໜຶ່ງກໍຄື ມັນເປັນຊີວິດທີ່ມະນຸດບໍ່ເຄີຍຜະເຊີນຕັ້ງແຕ່ເວລາແຫ່ງການເນລະມິດສ້າງຈົນເຖິງປັດຈຸບັນ ແລະ ສະນັ້ນ ເຮົາຈຶ່ງເວົ້າວ່າ ເຮົາໄດ້ປະຕິບັດພາລະກິດທີ່ບໍ່ເຄີຍປະຕິບັດມາກ່ອນ" ແລະ ພຣະອົງຍັງກ່າວອີກວ່າ "ເພາະວ່າ ມື້ຂອງເຮົາຫຍັບເຂົ້າໃກ້ມະນຸດຊາດທັງປວງ, ຍ້ອນມັນເບິ່ງຄືກັບວ່າບໍ່ໄດ້ຢູ່ໄກ, ແຕ່ມັນຢູ່ຕໍ່ໜ້າຕໍ່ຕາມະນຸດເອງ". ໃນອະດີດ ພຣະເຈົ້າໄດ້ທຳລາຍຫຼາຍເມືອງດ້ວຍຕົວພຣະອົງເອງ, ແຕ່ບໍ່ມີເມືອງໃດທີ່ຖືກເຜົາທຳລາຍໃນລັກສະນະດຽວກັນກັບສິ່ງທີ່ຈະເກີດຂຶ້ນໃນວາລະສຸດທ້າຍ. ເຖິງແມ່ນ ໃນອະດີດ ພຣະເຈົ້າທຳລາຍໂຊໂດມ, ໂຊໂດມໃນປັດຈຸບັນກໍຍັງບໍ່ໄດ້ຖືກປະຕິບັດນຳຄືກັບໃນອະດີດ, ມັນບໍ່ໄດ້ຖືກທຳລາຍໂດຍກົງ, ແຕ່ຈະຖືກເອົາຊະນະກ່ອນ ແລະ ຫຼັງຈາກນັ້ນກໍຖືກພິພາກສາ ແລະ ໃນທີ່ສຸດ ກໍຕົກຢູ່ໃນການລົງໂທດຕະຫຼອດໄປເປັນນິດ. ສິ່ງເຫຼົ່ານີ້ແມ່ນຂັ້ນຕອນຂອງພາລະກິດ ແລະ ໃນທີ່ສຸດ ໂຊໂດມໃນປັດຈຸບັນກໍຈະຖືກທຳລາຍລ້າງເໝືອນດັ່ງການທຳລາຍໂລກໃນອະດີດ ເຊິ່ງນີ້ແມ່ນແຜນການຂອງພຣະເຈົ້າ. ມື້ທີ່ພຣະເຈົ້າປາກົດຕົວແມ່ນມື້ແຫ່ງການປະນາມເມືອງໂຊດົມໃນປັດຈຸບັນຢ່າງເປັນທາງການ ແລະ ພຣະນິມິດຂອງພຣະອົງບໍ່ແມ່ນເພື່ອຊ່ວຍເມືອງນັ້ນໃຫ້ລອດພົ້ນ. ສະນັ້ນ ພຣະເຈົ້າຈຶ່ງກ່າວວ່າ "ເຮົາປາກົດຕົວຕໍ່ອານາຈັກທີ່ບໍລິສຸດ ແລະ ເຊື່ອງຕົນເອງຈາກດິນແດນທີ່ສົກກະປົກ". ຍ້ອນໂຊໂດມໃນປັດຈຸບັນບໍ່ບໍລິສຸດ, ພຣະເຈົ້າຈຶ່ງບໍ່ປາກົດຕົວຕໍ່ເມືອງນັ້ນຢ່າງແທ້ຈິງ, ແຕ່ໃຊ້ວິທີນີ້ເພື່ອຂ້ຽນຕີເມືອງນັ້ນ, ພວກເຈົ້າຍັງເບິ່ງບໍ່ເຫັນສິ່ງນີ້ຢ່າງຊັດເຈນບໍ? ມັນສາມາດເວົ້າໄດ້ວ່າ ບໍ່ມີໃຜເທິງແຜ່ນດິນໂລກທີ່ສາມາດເຫັນໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ພຣະເຈົ້າບໍ່ເຄີຍປາກົດຕົວຕໍ່ມະນຸດຈັກເທື່ອ ແລະ ບໍ່ມີໃຜຮູ້ຈັກວ່າພຣະເຈົ້າຢູ່ໃນຊັ້ນເທົ່າໃດຂອງສະຫວັນ. ນີ້ແມ່ນສິ່ງທີ່ເຮັດໃຫ້ຜູ້ຄົນໃນປັດຈຸບັນຢູ່ໃນສະພາບແບບນີ້. ຖ້າພວກເຂົາໄດ້ເຫັນໃບໜ້າຂອງພຣະເຈົ້າ, ນັ້ນກໍຈະເປັນເວລາຈຸດຈົບຂອງພວກເຂົາຈະຖືກເປີດເຜີຍອອກຢ່າງແນ່ນອນ, ເຊິ່ງເປັນເວລາທີ່ແຕ່ລະຄົນຈະໄດ້ຖືກຈັດແບ່ງອອກຕາມປະເພດຂອງໃຜມັນ. ໃນປັດຈຸບັນ ພຣະທຳຈາກພາຍໃນຄວາມສັກສິດໄດ້ຖືກສະແດງອອກຕໍ່ຜູ້ຄົນໂດຍກົງ ເຊິ່ງທຳນາຍວ່າ ຍຸກສຸດທ້າຍຂອງມະນຸດຊາດໄດ້ມາເຖິງແລ້ວ ແລະ ຈະສິ້ນສຸດລົງໃນໄວໆນີ້. ນີ້ແມ່ນໜຶ່ງໃນໝາຍສຳຄັນທີ່ບົ່ງບອກວ່າຜູ້ຄົນຕົກຢູ່ໃນການທົດລອງໃນເວລາທີ່ພຣະເຈົ້າປາກົດຕົວຕໍ່ທຸກຄົນ. ສະນັ້ນ ເຖິງແມ່ນຜູ້ຄົນໄດ້ຮັບເອົາພຣະທຳຂອງພຣະເຈົ້າ ພວກເຂົາກໍຈະຮູ້ສຶກມີລາງສັງຫອນຢູ່ສະເໝີຄືກັບວ່າໄພພິບັດອັນໃຫຍ່ຫຼວງກຳລັງຈະເກີດຂຶ້ນກັບພວກເຂົາ. ຜູ້ຄົນໃນປັດຈຸບັນເປັນຄືກັບນົກຈອກໃນດິນແດນແຫ່ງນໍ້າກ້ອນ ເຊິ່ງມັນຄືກັບວ່າ ຄວາມຕາຍໄດ້ບັງຄັບໃຫ້ມັນຈ່າຍໜີ້ຄືນ ແລະ ເຮັດໃຫ້ພວກມັນບໍ່ມີທາງເອົາຕົວລອດໄດ້. ຍ້ອນໜີ້ແຫ່ງຄວາມຕາຍທີ່ມະນຸດມີ, ທຸກຄົນຈຶ່ງຮູ້ສຶກວ່າມື້ສຸດທ້າຍຂອງພວກເຂົາໄດ້ມາເຖິງແລ້ວ. ນີ້ແມ່ນສິ່ງທີ່ກຳລັງເກີດຂຶ້ນໃນຫົວໃຈຂອງຜູ້ຄົນທົ່ວຈັກກະວານ ແລະ ເຖິງແມ່ນມັນບໍ່ໄດ້ຖືກເປີດເຜີຍຕໍ່ໜ້າຂອງພວກເຂົາ, ສິ່ງທີ່ຢູ່ໃນຫົວໃຈຂອງພວກເຂົາແມ່ນບໍ່ສາມາດລີ້ຈາກສາຍຕາຂອງເຮົາໄດ້, ນີ້ແມ່ນຄວາມເປັນຈິງຂອງມະນຸດ. ບາງເທື່ອ ພຣະທຳຫຼາຍຂໍ້ບໍ່ໄດ້ຖືກ

ນຳໃຊ້ທັງໝົດຢ່າງຖືກວິທີ, ແຕ່ພຣະທຳເຫຼົ່ານີ້ກໍພຽງພໍໃນການບົ່ງບອກເຖິງບັນຫາ. ພຣະທຳທຸກໆຂໍ້ທີ່ມາຈາກປາກຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດ, ບໍ່ວ່າພຣະທຳເຫຼົ່ານີ້ຈະມາຈາກອະດີດ ຫຼື ປັດຈຸບັນ; ພຣະທຳເຫຼົ່ານີ້ກໍຈະເຮັດໃຫ້ຄວາມຈິງປາກົດຕໍ່ໜ້າຜູ້ຄົນ, ເປັນສິ່ງເພີດເພີນຕາຂອງພວກເຂົາ, ເຊິ່ງໃນບາງເວລາພວກເຂົາຈະມືດມົວ ແລະ ສັບສົນ. ພວກເຈົ້າຍັງເບິ່ງບໍ່ເຫັນແທ້ບໍວ່າ ໃນປັດຈຸບັນ ຄືຍຸກຫຍັງ?

# ບົດທີ 30

ບາງຄົນອາດຈະມີການຢັ່ງຮູ້ໜ້ອຍໜຶ່ງໃນພຣະທຳຂອງພຣະເຈົ້າ ແຕ່ບໍ່ມີຜູ້ໃດເຊື່ອໃຈຄວາມຮູ້ສຶກຂອງພວກເຂົາ; ພວກເຂົາຢ້ານທີ່ຈະຕົກໄປສູ່ຄວາມເປັນລົບຫຼາຍ. ສະນັ້ນ, ພວກເຂົາຈຶ່ງມີຄວາມສຸກ ແລະ ຄວາມເສົ້າສະຫຼັບກັນຢູ່ຕະຫຼອດ. ມັນຍຸຕິທຳທີ່ຈະເວົ້າວ່າ ຊີວິດຂອງຜູ້ຄົນແມ່ນເຕັມໄປດ້ວຍຄວາມໂສກເສົ້າ; ເພື່ອເພີ່ມເຕີມໃນສິ່ງນີ້, ມັນໄດ້ມີການເຮັດໃຫ້ ຊີວິດປະຈຳວັນຂອງທຸກຄົນບໍລິສຸດ ແຕ່ເຮົາກໍສາມາດເວົ້າໄດ້ວ່າ ບໍ່ມີໃຜໄດ້ຮັບການປົດປ່ອຍໃດໆໃນຈິດໃຈຂອງພວກເຂົາໃນແຕ່ລະມື້ ແລະ ມັນເປັນຄືກັບວ່າ ພູເຂົາໃຫຍ່ທັງສາມກຳລັງເຕັງຫົວຂອງພວກເຂົາ. ບໍ່ມີແມ່ນແຕ່ໜຶ່ງຊີວິດຂອງພວກເຂົາທີ່ຈະມີຄວາມສຸກ ແລະ ຄວາມເບີກບານຕະຫຼອດເວລາ ແລະ ແມ່ນແຕ່ໃນເວລາທີ່ພວກເຂົາມີຄວາມສຸກເລັກນ້ອຍ ພວກເຂົາກໍພຽງແຕ່ພະຍາຍາມທຳທ່າເຮັດ. ໃນຫົວໃຈຂອງພວກເຂົາ, ຜູ້ຄົນມີຄວາມຮູ້ສຶກສະເໝີວ່າ ມີບາງຢ່າງທີ່ຍັງບໍ່ສຳເລັດ. ສະນັ້ນ, ພວກເຂົາບໍ່ມີຄວາມໝັ້ນໃຈໃນຫົວໃຈຂອງພວກເຂົາ; ການໃຊ້ຊີວິດແບບນີ້, ຮູ້ສຶກວ່າ ສິ່ງຕ່າງໆເປົ່າວ່າງ ແລະ ບໍ່ຍຸຕິທຳ ແລະ ເມື່ອເວົ້າເຖິງຄວາມເຊື່ອໃນພຣະເຈົ້າ ພວກເຂົາກໍຫຍຸ້ງ ແລະ ບໍ່ມີເວລາ ຫຼື ພວກເຂົາບໍ່ມີເວລາກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ຫຼື ບໍ່ຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງຖືກຕ້ອງ. ບໍ່ມີບຸກຄົນໃດໃນພວກເຂົາມີຄວາມສະຫງົບ, ຄວາມແຈ່ມແຈ້ງ ແລະ ຄວາມໝັ້ນໃຈໃນພວກເຂົາ. ມັນເປັນຄືກັບວ່າພວກເຂົາໄດ້ອາໄສຢູ່ໃຕ້ທ້ອງຟ້າທີ່ມືດຄຶ້ມຕະຫຼອດເວລາ, ຄືກັບວ່າ ພວກເຂົາອາໄສຢູ່ໃນອາວະກາດທີ່ບໍ່ມີອາກາດ ແລະ ສິ່ງນີ້ໄດ້ເຮັດໃຫ້ມີຄວາມສັບສົນໃນຊີວິດຂອງພວກເຂົາ. ພຣະເຈົ້າເວົ້າກົງໄປກົງມາກ່ຽວກັບຄວາມອ່ອນແອຂອງຜູ້ຄົນສະເໝີ, ພຣະອົງໂຈມຕີໃສ່ຈຸດອ່ອນຂອງພວກເຂົາ, ແລ້ວພວກເຈົ້າບໍ່ໄດ້ເຫັນນໍ້າສຽງຂອງການເວົ້າຂອງພຣະເຈົ້າຢ່າງຊັດເຈນບໍ? ພຣະເຈົ້າບໍ່ເຄີຍໃຫ້ໂອກາດຜູ້ຄົນໄດ້ສຳນຶກ ແລະ ພຣະອົງເຮັດໃຫ້ທຸກຄົນອາໄສຢູ່ "ດວງຈັນ" ໂດຍທີ່ບໍ່ມີອ໋ອກຊີ. ນັບຕັ້ງແຕ່ຕອນເລີ່ມຕົ້ນຈົນເຖິງປັດຈຸບັນ, ພຣະທຳດ້ານພາຍນອກຂອງພຣະເຈົ້າໄດ້ເປີດເຜີຍທຳມະຊາດຂອງມະນຸດ ແຕ່ບໍ່ມີຜູ້ໃດເຫັນແກ່ນແທ້ຂອງພຣະທຳເຫຼົ່ານີ້ຢ່າງຊັດເຈນ. ມັນປາກົດວ່າ ໃນການເປີດເຜີຍທາດແທ້ຂອງມະນຸດ, ຜູ້ຄົນໄດ້ຮູ້ຈັກຕົວເອງ ແລະ ດ້ວຍເຫດນັ້ນ ກໍຮູ້ຈັກພຣະເຈົ້າ ແຕ່ນີ້ບໍ່ແມ່ນເສັ້ນທາງໃນແກ່ນແທ້. ນໍ້າສຽງ ແລະ ຄວາມເລິກເຊິ່ງຂອງພຣະທຳຂອງພຣະເຈົ້າແມ່ນສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງພຣະເຈົ້າ ແລະ ມະນຸດຢ່າງຊັດເຈນ. ໃນຄວາມຮູ້ສຶກຂອງພວກເຂົາ, ສິ່ງນີ້ເຮັດໃຫ້ຜູ້ຄົນເຊື່ອຢ່າງບໍ່ຮູ້ສຶກຕົວວ່າ ພຣະເຈົ້າແມ່ນບໍ່ສາມາດເອື້ອມເຖິງ ແລະ ເຂົ້າເຖິງໄດ້; ພຣະເຈົ້າເປີດເຜີຍທຸກສິ່ງ ແລະ ເບິ່ງຄືວ່າ ບໍ່ມີໃຜສາມາດເຮັດໃຫ້ສາຍສຳພັນລະຫວ່າງ ພຣະເຈົ້າ ແລະ ມະນຸດກັບຄືນໄປເປັນຄືເກົ່າຕາມທີ່ເຄີຍເປັນ. ມັນບໍ່ຍາກເລີຍທີ່ຈະເຫັນວ່າ ເປົ້າໝາຍຂອງພຣະວັດຈະນະຂອງພຣະເຈົ້າທັງໝົດແມ່ນເພື່ອໃຊ້ພຣະທຳເພື່ອ "ໂຄ່ນລົ້ມ" ທຸກຄົນ ເຊິ່ງໂດຍວິທີນີ້ ກໍເປັນການບັນລຸພາລະກິດຂອງພຣະເຈົ້າ. ສິ່ງເຫຼົ່ານີ້ຄືຂັ້ນຕອນພາລະກິດຂອງພຣະເຈົ້າ. ແຕ່ນີ້ບໍ່ແມ່ນສິ່ງທີ່ຜູ້ຄົນເຊື່ອໃນຈິດໃຈຂອງພວກເຂົາ. ພວກເຂົາເຊື່ອວ່າ ພາລະກິດຂອງພຣະເຈົ້າແມ່ນກຳລັງໃກ້ເຂົ້າສູ່ຈຸດສູງສຸດ ນັ້ນກໍຄື ພາລະກິດ

ນັ້ນກຳລັງເຂົ້າໃກ້ຈຸດທີ່ເປັນຜົນເຫັນໄດ້ຢ່າງຊັດເຈນ ເພື່ອເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ ເຊິ່ງໝາຍຄວາມວ່າ ເປັນການເຮັດໃຫ້ຄຣິສຕະຈັກຈະເລີນກ້າວໜ້າດ້ວຍປາສະຈາກແນວຄວາມຄິດຂອງຜູ້ຄົນກ່ຽວກັບພຣະເຈົ້າທີ່ບັງເກີດເປັນມະນຸດ ຫຼື ບໍ່ດັ່ງນັ້ນກໍເຮັດໃຫ້ທຸກຄົນຮູ້ຈັກພຣະເຈົ້າ. ເຖິງຢ່າງໃດກໍຕາມ, ໃຫ້ພວກເຮົາອ່ານໃນສິ່ງທີ່ພຣະເຈົ້າກ່າວ: “ໃນຄວາມຄິດຂອງຜູ້ຄົນ, ພຣະເຈົ້າແມ່ນພຣະເຈົ້າ ແລະ ມັນກໍບໍ່ງ່າຍທີ່ຈະພົວພັນນຳ ໃນຂະນະທີ່ມະນຸດແມ່ນມະນຸດ ແລະ ບໍ່ຄວນກາຍເປັນຄົນໄຮ້ສິນທຳ... ດ້ວຍເຫດນັ້ນ ພວກເຂົາຈຶ່ງຖ່ອມຕົວ ແລະ ອົດທົນຕະຫຼອດເວລາຢູ່ຕໍ່ໜ້າເຮົາ; ພວກເຂົາບໍ່ສາມາດເຂົ້າກັບເຮົາໄດ້ ຍ້ອນວ່າ ພວກເຂົາມີແນວຄວາມຄິດຫຼາຍ”. ຈາກສິ່ງນີ້ສາມາດເຫັນໄດ້ວ່າ ບໍ່ວ່າພຣະເຈົ້າຈະເວົ້າຫຍັງ ຫຼື ມະນຸດຈະເຮັດຫຍັງ, ຜູ້ຄົນແມ່ນບໍ່ສາມາດຮູ້ຈັກພຣະເຈົ້າໄດ້ຢ່າງແທ້ຈິງ; ຍ້ອນບົດບາດທີ່ຫຼິ້ນໂດຍທາດແທ້ຂອງພວກເຂົາ, ບໍ່ວ່າໃນກໍລະນີໃດກໍຕາມ ສຸດທ້າຍແລ້ວ ພວກເຂົາກໍຈະບໍ່ສາມາດຮູ້ຈັກພຣະເຈົ້າ. ສະນັ້ນ, ພາລະກິດຂອງພຣະເຈົ້າຈະສິ້ນສຸດລົງເມື່ອຜູ້ຄົນເຫັນຕົວເອງເປັນບຸດແຫ່ງນະຣົກ. ບໍ່ຈຳເປັນຕ້ອງໃຫ້ພຣະເຈົ້າປ່ອຍຄວາມໂກດຮ້າຍຂອງພຣະອົງໃສ່ຜູ້ຄົນ ຫຼື ປະນາມພວກເຂົາໂດຍກົງ ຫຼື ສຸດທ້າຍ ຕັດສິນໃຫ້ພວກເຂົາໄປສູ່ຄວາມຕາຍ ເພື່ອເຮັດໃຫ້ການຄຸ້ມຄອງທັງໝົດຂອງພຣະອົງສຳເລັດລົງ. ພຣະອົງພຽງແຕ່ເວົ້າເລັກນ້ອຍຕາມອາລົມຂອງພຣະອົງເອງ ເຮັດຄືກັບວ່າການສຳເລັດພາລະກິດຂອງພຣະອົງແມ່ນເກີດຂຶ້ນໂດຍບັງເອີນ, ເປັນສິ່ງທີ່ເຮັດສຳເລັດໃນເວລາວ່າງຂອງພຣະອົງ ໂດຍບໍ່ມີການພະຍາຍາມແມ່ນແຕ່ໜ້ອຍດຽວ. ຈາກພາຍນອກ, ປາກົດຄືກັບວ່າ ມີຄວາມຮີບດ່ວນເລັກນ້ອຍກ່ຽວກັບພາລະກິດຂອງພຣະເຈົ້າ ແຕ່ເຖິງຢ່າງນັ້ນ ພຣະເຈົ້າກໍບໍ່ໄດ້ເຮັດຫຍັງ, ພຣະອົງບໍ່ໄດ້ເຮັດຫຍັງ ນອກຈາກເວົ້າ. ພາລະກິດໃນທ່າມກາງຄຣິສຕະຈັກແມ່ນບໍ່ໄດ້ມີຂະໜາດໃຫຍ່ຄືເກົ່າ ຄືກັບໃນອະດີດຜ່ານມາ: ພຣະເຈົ້າບໍ່ເພີ່ມຜູ້ຄົນ ຫຼື ຂັບໄລ່ພວກເຂົາອອກ ຫຼື ເປີດເຜີຍພວກເຂົາ. ພາລະກິດດັ່ງກ່າວແມ່ນບໍ່ສຳຄັນຫຼາຍ. ເບິ່ງຄືວ່າ ພຣະເຈົ້າບໍ່ໄດ້ສົນໃຈພາລະກິດດັ່ງກ່າວ. ພຣະອົງພຽງແຕ່ເວົ້າເລັກນ້ອຍກ່ຽວກັບສິ່ງທີ່ພຣະອົງຄວນເວົ້າ ເຊິ່ງຫຼັງຈາກນັ້ນ ພຣະອົງກໍຫັນກັບ ແລ້ວຫາຍໄປໂດຍບໍ່ມີຮ່ອງຮອຍ ເຊິ່ງໂດຍທຳມະຊາດແລ້ວ ນັ້ນແມ່ນຖືວ່າສຳເລັດໃນການກ່າວພຣະວັດຈະນະຂອງພຣະອົງ. ເມື່ອເວລານີ້ມາເຖິງ, ທຸກຄົນຈະຕື່ນຈາກການນອນຫຼັບຂອງພວກເຂົາ. ມະນຸດໄດ້ນອນຫຼັບຢ່າງບໍ່ມີຊີວິດເປັນເວລາຫຼາຍພັນປີ, ເຂົາໄດ້ນອນຫຼັບຕະຫຼອດ. ເປັນເວລາຫຼາຍປີ, ຜູ້ຄົນພາກັນຟ້າວໄປບ່ອນນັ້ນ ແລະ ບ່ອນນີ້ໃນຄວາມຝັນຂອງພວກເຂົາ ແລະ ພວກເຂົາເຖິງກັບຮ້ອງເປັນສຽງດັງໃນຄວາມຝັນຂອງພວກເຂົາ, ບໍ່ສາມາດເວົ້າເຖິງຄວາມຍຸຕິທຳຢູ່ພາຍໃນໃຈຂອງພວກເຂົາໄດ້. ສະນັ້ນ, ພວກເຂົາຈຶ່ງ “ຮູ້ສຶກໂສກເສົ້າເລັກນ້ອຍໃນໃຈຂອງພວກເຂົາ” ແຕ່ເມື່ອພວກເຂົາຕື່ນ ພວກເຂົາກໍຈະຄົ້ນພົບຄວາມຈິງ ແລະ ຮ້ອງອຸທານວ່າ: “ແລ້ວນີ້ຄືສິ່ງທີ່ເກີດຂຶ້ນ!” ສະນັ້ນ, ຈຶ່ງມີການເວົ້າວ່າ: “ໃນປັດຈຸບັນ, ຜູ້ຄົນສ່ວນໃຫຍ່ຍັງນອນຫຼັບສະນິດຢູ່. ເມື່ອມີສຽງເພງແຫ່ງອານາຈັກດັງຂຶ້ນເທົ່ານັ້ນ ພວກເຂົາຈຶ່ງຈະມືນຕາທີ່ຍັງເຫງົານອນຂອງເຂົາ ແລະ ຮູ້ສຶກໂສກເສົ້າເລັກນ້ອຍໃນໃຈຂອງພວກເຂົາ”.

ບໍ່ມີຈິດວິນຍານຂອງຜູ້ໃດເຄີຍຖືກປົດປ່ອຍ, ບໍ່ເຄີຍມີຈິດວິນຍານຂອງຜູ້ໃດທີ່ເປັນອິດສະຫຼະ ແລະ ມີຄວາມສຸກ. ເມື່ອພາລະກິດຂອງພຣະເຈົ້າຖືກເຮັດສຳເລັດຢ່າງສົມບູນ, ຈິດວິນຍານຂອງຜູ້ຄົນກໍ

ຈະຖືກປົດປ່ອຍ ເນື່ອງຈາກແຕ່ລະຄົນຈະຖືກຈັດຕາມປະເພດ ແລະ ດ້ວຍເຫດນັ້ນ ພວກເຂົາກໍຈະມີຄວາມໝັ້ນໃຈໃນຕົວພວກເຂົາ. ມັນຄືກັບວ່າ ຜູ້ຄົນກຳລັງເດີນທາງໄປສະຖານທີ່ຫ່າງໄກ ແລະ ຫົວໃຈຂອງພວກເຂົາໄດ້ມີຄວາມໝັ້ນໃຈ ໃນເວລາທີ່ພວກເຂົາກັບຄືນເມືອເຮືອນ. ເມື່ອໄດ້ກັບມາຮອດເຮືອນ, ຜູ້ຄົນຈະບໍ່ຮູ້ສຶກວ່າ ໂລກນີ້ວ່າງເປົ່າ ແລະ ບໍ່ຍຸຕິທຳອີກຕໍ່ໄປ ແຕ່ຈະດຳລົງຊີວິດຢ່າງງຽບສະຫງົບໃນເຮືອນຊານຂອງພວກເຂົາ. ສິ່ງດັ່ງກ່າວນັ້ນຈະເປັນສະຖານະການໃນທ່າມກາງມະນຸດທຸກຄົນ. ສະນັ້ນ, ພຣະເຈົ້າຈຶ່ງກ່າວວ່າ "ຜູ້ຄົນ ຈຶ່ງບໍ່ເຄີຍສາມາດປົດປ່ອຍຕົນເອງອອກຈາກການເປັນທາດຂອງຊາຕານໄດ້". ບໍ່ມີໃຜສາມາດເຮັດໃຫ້ພວກເຂົາເອງຫຼຸດພົ້ນຈາກສະພາບດັ່ງກ່າວນີ້ໃນຂະນະທີ່ຢູ່ໃນເນື້ອໜັງ. ໃນຕອນນີ້ ໃຫ້ພວກເຮົາປະສິ່ງທີ່ພຣະເຈົ້າກ່າວ ກ່ຽວກັບສະພາບຈິງຂອງມະນຸດນັ້ນໄວ້ທາງຂ້າງກ່ອນ ແລ້ວມາເວົ້າເຖິງຄວາມເລິກລັບທີ່ພຣະເຈົ້າຍັງບໍ່ທັນໄດ້ເປີດເຜີຍຕໍ່ມະນຸດ. "ຜູ້ຄົນເບິ່ງເຮົາດ້ວຍສາຍຕາທີ່ເຍາະເຍີ້ຍຫຼາຍຄັ້ງຈົນນັບບໍ່ຖ້ວນ ຄືກັບວ່າ ຮ່າງກາຍຂອງເຮົາແມ່ນຖືກປົກຫຸ້ມດ້ວຍໜາມ ແລະເປັນສິ່ງທີ່ພວກເຂົາກຽດຊັງ ແລະ ດ້ວຍເຫດນັ້ນ ຈຶ່ງກຽດຊັງເຮົາ ແລະ ເຊື່ອວ່າ ເຮົາບໍ່ມີຄ່າ". ໃນທາງກົງກັນຂ້າມ, ໂດຍພື້ນຖານແລ້ວ ແກ່ນແທ້ຂອງມະນຸດແມ່ນຖືກເປີດເຜີຍໃນພຣະທຳຂອງພຣະເຈົ້າ: ມະນຸດຖືກປົກຫຸ້ມດ້ວຍຂົນເໝັ້ນ ເຊິ່ງບໍ່ມີຫຍັງງາມໃນຕົວເຂົາ ແລະ ດ້ວຍເຫດນັ້ນ ຄວາມກຽດຊັງຂອງພຣະເຈົ້າທີ່ມີຕໍ່ມະນຸດຈຶ່ງເພີ່ມຂຶ້ນ ເນື່ອງຈາກມະນຸດບໍ່ແມ່ນຫຍັງ ນອກຈາກໂຕເໝັ້ນທີ່ຖືກປົກຫຸ້ມດ້ວຍໜາມ ທີ່ບໍ່ມີສິ່ງໃດທີ່ເປັນຕາຊື່ນຊົມນຳເລີຍ. ໃນດ້ານຜິວເຜີນແລ້ວ, ປາກົດຄືວ່າ ພຣະທຳເຫຼົ່ານີ້ອະທິບາຍເຖິງແນວຄວາມຄິດຂອງມະນຸດທີ່ມີຕໍ່ພຣະເຈົ້າ ແຕ່ໃນຄວາມເປັນຈິງແລ້ວ ພຣະເຈົ້າກຳລັງແຕ້ມຮູບຂອງມະນຸດໂດຍອີງໃສ່ຮູບພາບ ຂອງເຂົາ. ພຣະທຳເຫຼົ່ານີ້ແມ່ນການພັນລະນາຂອງພຣະເຈົ້າກ່ຽວກັບມະນຸດ ແລະ ມັນເປັນຄືກັບວ່າ ພຣະເຈົ້າໄດ້ສີດແນວຕິດໃສ່ຮູບຂອງມະນຸດ; ສະນັ້ນ, ຮູບຂອງມະນຸດຈຶ່ງຕິດຢູ່ສູງທົ່ວຈັກກະວານ ແລະ ເຖິງກັບເຮັດໃຫ້ຜູ້ຄົນຕົກຕະລຶງ. ນັບຕັ້ງແຕ່ເວລາທີ່ພຣະອົງເລີ່ມກ່າວ, ພຣະເຈົ້າໄດ້ຈັດວາງກຳລັງຂອງພຣະອົງເພື່ອການຕໍ່ສູ້ຢ່າງຍິ່ງໃຫຍ່ກັບມະນຸດ. ພຣະອົງເປັນຄືກັບສາສະດາຈານວິຊາພຶດຊາຄະນິດຂອງມະຫາວິທະຍາໄລ ທີ່ເປີດເຜີຍຄວາມຈິງຕໍ່ມະນຸດ ແລະ ສິ່ງທີ່ຖືກພິສູດດ້ວຍຄວາມຈິງທີ່ພຣະອົງໄດ້ນຳສະເໜີ ເຊັ່ນ: ຫຼັກຖານ ແລະ ຫຼັກຖານຈາກຝ່າຍຕ່າງໆ ໄດ້ເຮັດໃຫ້ທຸກຄົນເຊື່ອຢ່າງສິ້ນເຊີງ. ນີ້ແມ່ນເປົ້າໝາຍຂອງພຣະທຳຂອງພຣະເຈົ້າ ແລະ ຍ້ອນສິ່ງນີ້ ພຣະເຈົ້າຈຶ່ງໂຍນພຣະທຳເລິກລັບເຫຼົ່ານີ້ໃສ່ມະນຸດ: "ຈຶ່ງສະຫຼຸບໄດ້ວ່າ ເຮົາບໍ່ມີຄຸນຄ່າໃນຫົວໃຈຂອງມະນຸດເລີຍ ແລະ ເຮົາເປັນພຽງເຄື່ອງເຮືອນທີ່ບໍ່ຈຳເປັນ". ຫຼັງຈາກອ່ານພຣະທຳເຫຼົ່ານີ້, ຜູ້ຄົນບໍ່ສາມາດຊ່ວຍໄດ້ ນອກຈາກກ່າວຄຳອະທິຖານໃນຫົວໃຈຂອງພວກເຂົາ ແລະ ພວກເຂົາໄດ້ຮູ້ຈັກເຖິງຄວາມເປັນໜີ້ບຸນຄຸນຕໍ່ພຣະເຈົ້າ ເຊິ່ງເຮັດໃຫ້ພວກເຂົາປະນາມຕົວເອງ, ເຮັດໃຫ້ພວກເຂົາເຊື່ອວ່າມະນຸດຄວນຕາຍ ແລະ ບໍ່ມີຄ່າແມ່ນແຕ່ໜ້ອຍດຽວ. ພຣະເຈົ້າກ່າວວ່າ "ຍ້ອນສິ່ງນີ້ ເຮົາຈຶ່ງພົບເຫັນຕົວເອງຢູ່ໃນສະພາບປັດຈຸບັນຂອງເຮົາ" ເຊິ່ງເມື່ອມາປຽບທຽບກັບສະຖານະການຕົວຈິງໃນປັດຈຸບັນແລ້ວເຮັດໃຫ້ຜູ້ຄົນປະນາມຕົວເອງ. ນີ້ບໍ່ແມ່ນຄວາມຈິງບໍ? ຖ້າເຈົ້າຖືກເຮັດໃຫ້ຮູ້ຈັກຕົວເອງ ແລ້ວຄຳເວົ້າທີ່ວ່າ "ຂ້ອຍຄວນຕາຍແທ້ໆ!" ຈະສາມາດອອກມາຈາກປາກຂອງເຈົ້າໄດ້ບໍ? ສິ່ງດັ່ງກ່າວແມ່ນ

ສະຖານະການຂອງມະນຸດທີ່ແທ້ຈິງ ແລະ ສິ່ງນີ້ບໍ່ຄູ່ຄວນທີ່ຈະໄດ້ຮັບການໃສ່ໃຈຫຼາຍເກີນໄປ. ມັນເປັນພຽງຕົວຢ່າງເທົ່ານັ້ນ.

ໃນດ້ານໜຶ່ງ, ເມື່ອພຣະເຈົ້າຮຽກຮ້ອງການໃຫ້ອະໄພ ແລະ ການອົດທົນຈາກມະນຸດ, ຜູ້ຄົນເຫັນວ່າ ພຣະເຈົ້າກຳລັງລໍ້ຫຼິ້ນກັບພວກເຂົາ ແລະ ໃນອີກດ້ານໜຶ່ງ ພວກເຂົາຍັງໄດ້ເຫັນການກະບົດຂອງພວກເຂົາ. ພວກເຂົາພຽງແຕ່ລໍຖ້າໃຫ້ພຣະເຈົ້າໃຊ້ຄວາມພະຍາຍາມຢ່າງສຸດຄວາມສາມາດຂອງພຣະອົງເອງເພື່ອມະນຸດ. ນອກຈາກນັ້ນ, ກ່ຽວກັບແນວຄວາມຄິດຂອງຜູ້ຄົນແລ້ວ, ພຣະເຈົ້າເວົ້າວ່າພຣະອົງບໍ່ຊຳນານໃນປັດຊະຍາຂອງມະນຸດສຳລັບການດຳລົງຊີວິດ ຫຼື ພາສາຂອງມະນຸດ. ສະນັ້ນ, ໃນແງ່ໜຶ່ງ ສິ່ງນີ້ເຮັດໃຫ້ຜູ້ຄົນປຽບທຽບພຣະທຳເຫຼົ່ານີ້ກັບພຣະເຈົ້າທີ່ແທ້ຈິງ ແລະ ໃນອີກແງ່ໜຶ່ງ ພວກເຂົາເຫັນເຈດຕະນາຂອງພຣະເຈົ້າໃນພຣະທຳຂອງພຣະອົງ. ພຣະເຈົ້າກຳລັງເຍາະເຍີ້ຍພວກເຂົາ ເນື່ອງຈາກພວກເຂົາເຂົ້າໃຈວ່າ ພຣະເຈົ້າກຳລັງເປີດເຜີຍໃບໜ້າທີ່ແທ້ຈິງຂອງມະນຸດ ແລະ ພຣະອົງບໍ່ບອກຜູ້ຄົນກ່ຽວກັບສະຖານະການແທ້ຈິງຂອງພຣະເຈົ້າ. ຄວາມໝາຍດັ່ງເດີມຂອງພຣະທຳຂອງພຣະເຈົ້າແມ່ນເຕັມໄປດ້ວຍການລໍ້ລຽນ, ການສຽດສີ, ການເຍາະເຍີ້ຍ ແລະ ການກຽດຊັງທີ່ມີຕໍ່ມະນຸດ. ໃນທຸກສິ່ງທີ່ເຂົາເຮັດ ມັນຄືກັບວ່າ ມະນຸດກຳລັງເຮັດຜິດກົດ ແລະ ຮັບສິນບົນ; ຜູ້ຄົນແມ່ນເປັນໂສເພນີ ແລະ ເມື່ອພຣະເຈົ້າເປີດປາກຂອງພຣະອົງເພື່ອເວົ້າ, ພວກເຂົາກໍຈະສັ່ນດ້ວຍຄວາມຢ້ານກົວ, ຢ້ານຢູ່ເລິກໆວ່າ ຄວາມຈິງກ່ຽວກັບພວກເຂົາຈະຖືກເປີດເຜີຍຢ່າງລະອຽດ ເຊິ່ງເຮັດໃຫ້ພວກເຂົາອັບອາຍທີ່ຈະພົບກັບຄົນອື່ນ. ແຕ່ຄວາມຈິງກໍຄືຄວາມຈິງ. ພຣະເຈົ້າບໍ່ຢຸດກ່າວພຣະວັດຈະນະຂອງພຣະອົງຍ້ອນ "ຄວາມສຳນຶກຜິດ" ຂອງມະນຸດ; ຍິ່ງຜູ້ຄົນມີຄວາມລະອາຍໃຈ ແລະ ຄວາມອັບອາຍຈົນບໍ່ສາມາດບັນລະຍາຍໄດ້, ພຣະເຈົ້າກໍຍິ່ງຈ້ອງສາຍຕາອັນເຜົາໄໝ້ຂອງພຣະອົງໃສ່ໃບໜ້າຂອງພວກເຂົາ. ພຣະທຳທີ່ມາຈາກປາກຂອງພຣະອົງໄດ້ວາງການກະທຳອັນຂີ້ຮ້າຍຂອງມະນຸດຢູ່ເທິງໂຕະ. ສິ່ງນີ້ແມ່ນຖືກຕ້ອງ ແລະ ຍຸຕິທຳ, ສິ່ງນີ້ແມ່ນເອີ້ນວ່າ ຈິງຕຽນ[ກ] ແລະ ນີ້ຄືການພິພາກສາທີ່ມາຈາກສານປະຊາຊົນສູງສຸດ. ສະນັ້ນ, ເມື່ອຜູ້ຄົນອ່ານພຣະທຳຂອງພຣະເຈົ້າ, ພວກເຂົາກໍເກີດຫົວໃຈວາຍຢ່າງກະທັນຫັນ, ຄວາມດັນເລືອດຂອງພວກເຂົາກໍສູງຂຶ້ນ, ມັນເປັນຄືກັບວ່າ ພວກເຂົາທົນທຸກກັບໂລກຫົວໃຈ, ຄືກັບວ່າໂລກບ້າໝູຈະສົ່ງພວກເຂົາກັບຄືນໄປສູ່ສະຫວັນແຫ່ງທິດຕາເວັນຕົກ ເພື່ອໄປພົບກັບບັນພະບຸລຸດຂອງພວກເຂົາ. ນີ້ແມ່ນປະຕິກິລິຍາເມື່ອພວກເຂົາໄດ້ອ່ານພຣະທຳຂອງພຣະເຈົ້າ. ມະນຸດແມ່ນບໍ່ແຂງແຮງຍ້ອນການເຮັດວຽກໜັກເປັນເວລາຫຼາຍປີ, ເຂົາບໍ່ສະບາຍຢູ່ພາຍໃນ ແລະ ພາຍນອກ, ທຸກສິ່ງໃນຕົວເຂົາແມ່ນບໍ່ສະບາຍ, ນັບແຕ່ຫົວໃຈໄປຫາເສັ້ນເລືອດ, ລຳໄສ້ໃຫຍ່, ລຳໄສ້ນ້ອຍ, ທ້ອງ, ປອດ, ໝາກໄຂ່ຫຼັງ ແລະ ອື່ນໆ. ບໍ່ມີສິ່ງໃດໃນຮ່າງກາຍທັງໝົດຂອງເຂົາທີ່ແຂງແຮງ. ສະນັ້ນ, ພາລະກິດຂອງພຣະເຈົ້າຈຶ່ງໄປບໍ່ຮອດລະດັບທີ່ມະນຸດບໍ່ສາມາດບັນລຸໄດ້ ແຕ່ເຮັດໃຫ້ຜູ້ຄົນຮູ້ຈັກຕົວເອງ. ຍ້ອນຮ່າງກາຍຂອງມະນຸດຖືກທຳລາຍດ້ວຍໄວຣັດ ແລະ ຍ້ອນເຂົາໄດ້ເຖົ້າແກ່ລົງ, ມື້ແຫ່ງຄວາມຕາຍຂອງເຂົາກໍຫຍັບ

ກ ຈິງຕຽນ: ຄຳສັບນີ້ແມ່ນຖືກໃຊ້ເພື່ອອ້າງອີງເຖິງຜູ້ພິພາກສາທີ່ຊອບທຳໃນຍຸກແຫ່ງຈັກກະພັດຂອງປະເທດຈີນ.

ໃກ້ເຂົ້າມາ ແລະ ບໍ່ມີທາງຈະຫວນກັບຄືນໄດ້. ແຕ່ສິ່ງນີ້ເປັນພຽງສ່ວນໜຶ່ງຂອງເລື່ອງລາວເທົ່ານັ້ນ; ຄວາມໝາຍແທ້ຈິງແມ່ນຍັງບໍ່ທັນໄດ້ຖືກເປີດເຜີຍ ເນື່ອງຈາກວ່າ ແຫຼ່ງທີ່ມາຂອງຄວາມເຈັບປ່ວຍຂອງມະນຸດແມ່ນກຳລັງຖືກຄົ້ນຄວ້າຢູ່. ໃນຄວາມເປັນຈິງແລ້ວ, ເວລາທີ່ພາລະກິດທັງໝົດຂອງພຣະເຈົ້າສຳເລັດບໍ່ແມ່ນເວລາທີ່ພາລະກິດຂອງພຣະອົງຢູ່ເທິງແຜ່ນດິນໂລກສຳເລັດ ເນື່ອງຈາກວ່າ ເມື່ອຂັ້ນຕອນນີ້ຂອງພາລະກິດໄດ້ສຳເລັດລົງ ກໍຈະບໍ່ມີທາງທີ່ຈະດຳເນີນພາລະກິດອະນາຄົດໃນເນື້ອໜັງໄດ້ ແລະ ພຣະວິນຍານຂອງພຣະເຈົ້າກໍຈຳເປັນຕ້ອງປະຕິບັດມັນໃຫ້ສຳເລັດ. ສະນັ້ນ, ພຣະເຈົ້າຈຶ່ງເວົ້າວ່າ "ເມື່ອເຮົາມາຍໜັງສືມ້ວນຢ່າງເປັນທາງການກໍຄືເວລາທີ່ຜູ້ຄົນທົ່ວທັງຈັກກະວານຖືກຂ້ຽນຕີ, ເວລາທີ່ພາລະກິດຂອງເຮົາເຖິງຈຸດສູງສຸດ, ເວລາທີ່ທຸກຄົນທົ່ວແຜ່ນດິນໂລກຕົກຢູ່ໃນການທົດລອງ". ເວລາທີ່ພາລະກິດໃນເນື້ອໜັງສຳເລັດບໍ່ແມ່ນເວລາທີ່ພາລະກິດຂອງພຣະເຈົ້າເຖິງຈຸດສູງສຸດ. ຈຸດສູງສຸດຂອງເວລານີ້ແມ່ນພຽງອ້າງອີງເຖິງພາລະກິດໃນຂັ້ນຕອນນີ້ ແລະ ບໍ່ແມ່ນຈຸດສູງສຸດຂອງແຜນການຄຸ້ມຄອງທັງໝົດ. ສະນັ້ນ, ຄວາມຕ້ອງການຂອງພຣະເຈົ້າຈຶ່ງບໍ່ສູງ. ພຣະອົງພຽງແຕ່ຂໍໃຫ້ຜູ້ຄົນຮູ້ຈັກຕົວເອງເພື່ອຮັບໃຊ້ຂັ້ນຕອນຕໍ່ໄປຂອງພາລະກິດ ແລະ ເພື່ອ ຄວາມປະສົງຂອງພຣະເຈົ້າຈະໄດ້ບັນລຸຜົນ. ເມື່ອພາລະກິດຂອງພຣະເຈົ້າປ່ຽນ, "ໜ່ວຍງານເຮັດວຽກ" ຂອງຜູ້ຄົນກໍປ່ຽນ. ປັດຈຸບັນຄືຂັ້ນຕອນພາລະກິດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ແລະ ດັ່ງນັ້ນ ພວກເຂົາຈຶ່ງຕ້ອງເຮັດພາລະກິດໃນລະດັບຂັ້ນຮາກຖານ. ໃນອະນາຄົດ, ມັນອາດຈຳເປັນຕ້ອງບໍລິຫານໃນລະດັບຊາດ ແລະ ເມື່ອນັ້ນ ພວກເຂົາຈະຕ້ອງໄດ້ມອບໝາຍໜ້າທີ່ໃໝ່ໃຫ້ເປັນ "ຄະນະກຳມະການສູນກາງ". ຖ້າພວກເຂົາໄປຢ້ຽມຢາມຕ່າງປະເທດ, ພວກເຂົາກໍຈະຕ້ອງໄດ້ຈັດການກັບຂັ້ນຕອນຕ່າງໆສຳລັບການໄປຕ່າງປະເທດ. ໃນເວລາດັ່ງກ່າວພວກເຂົາຈະຢູ່ຕ່າງປະເທດ ເຊິ່ງໄກຈາກບ້ານເກີດເມືອງນອນຂອງພວກເຂົາ, ສິ່ງນີ້ຄືຄວາມຕ້ອງການໃນພາລະກິດຂອງພຣະເຈົ້າ. ດັ່ງທີ່ຜູ້ຄົນໄດ້ກ່າວໄວ້ວ່າ: "ພວກເຮົາຈະວາງຊີວິດຂອງພວກເຮົາລົງເພື່ອພຣະເຈົ້າເມື່ອຈຳເປັນ". ນີ້ບໍ່ແມ່ນເສັ້ນທາງທີ່ຈະຍ່າງໃນອະນາຄົດບໍ? ແມ່ນໃຜເຄີຍມີຄວາມສຸກກັບຊີວິດດັ່ງກ່າວແດ່? ຜູ້ຄົນສາມາດເດີນທາງໄປທົ່ວທຸກແຫ່ງຫົນ, ໄປຕ່າງປະເທດ, ໃຫ້ການຊີ້ນຳໃນເຂດຊົນນະບົດ, ປັບຕົວເອງເຂົ້າກັບຄົນທົ່ວໄປ ແລະ ພວກເຂົາຍັງສາມາດໂອ້ລົມກ່ຽວກັບບັນຫາສຳຄັນຂອງປະເທດຊາດກັບສະມາຊິກຂອງອົງກອນລະດັບສູງ; ແລະ ເມື່ອມີຄວາມຈຳເປັນ ພວກເຂົາສາມາດຊີມລົດຊາດຊີວິດໃນນະຣົກດ້ວຍຕົວເອງໄດ້ ເຊິ່ງຫຼັງຈາກນັ້ນ ພວກເຂົາກໍສາມາດກັບຄືນ ແລະ ມີຄວາມສຸກກັບພອນຈາກສະຫວັນໄດ້ເຊັ່ນກັນ. ສິ່ງເຫຼົ່ານີ້ບໍ່ແມ່ນພອນຂອງມະນຸດບໍ? ແມ່ນໃຜເຄີຍຖືກປຽບທຽບກັບພຣະເຈົ້າແດ່? ແມ່ນໃຜເຄີຍເດີນທາງໄປທົ່ວທຸກປະເທດແດ່? ທີ່ຈິງແລ້ວ, ຜູ້ຄົນຈະສາມາດເຂົ້າໃຈເລັກນ້ອຍກ່ຽວກັບພຣະທຳບາງຂໍ້ຂອງພຣະເຈົ້າ ໂດຍບໍ່ມີການບົ່ງຊີ້ ຫຼື ຄຳອະທິບາຍ. ມັນເປັນພຽງແຕ່ວ່າ ພວກເຂົາບໍ່ມີຄວາມເຊື່ອໃນຕົວເອງ ເຊິ່ງມັນຄືສິ່ງທີ່ຂະຫຍາຍພາລະກິດຂອງພຣະເຈົ້າຈົນຮອດປັດຈຸບັນ. ຍ້ອນຜູ້ຄົນຂາດເຂີນຫຼາຍ, ດັ່ງທີ່ພຣະເຈົ້າກ່າວວ່າ: "ພວກເຂົາບໍ່ມີຫຍັງ", ພາລະກິດໃນປັດຈຸບັນຈຶ່ງມີຄວາມຫຍຸ້ງຍາກຫຼາຍສຳລັບພວກເຂົາ; ຍິ່ງໄປກວ່ານັ້ນ, ໂດຍທຳມະຊາດແລ້ວ ຄວາມອ່ອນແອຂອງພວກເຂົາໄດ້ຈຳກັດປາກຂອງພຣະເຈົ້າ ແລະ ສິ່ງເຫຼົ່ານີ້ບໍ່ແມ່ນສິ່ງທີ່ຂັດຂວາງ

ພາລະກິດຂອງພຣະເຈົ້າຢ່າງແທ້ຈິງບໍ? ເຈົ້າຍັງບໍ່ສາມາດເຫັນໃນສິ່ງນີ້ບໍ? ມັນມີຄວາມໝາຍເລິກລັບໃນທຸກສິ່ງທີ່ພຣະເຈົ້າກ່າວ. ເມື່ອພຣະເຈົ້າກ່າວ, ພຣະອົງເນັ້ນບັນຫາທີ່ຢູ່ໃນມື ແລະ ພຣະທຳທັງໝົດທີ່ພຣະເຈົ້າກ່າວແມ່ນມີຂໍ້ຄວາມຢ່າງເລິກເຊິ່ງຄ້າຍຄືກັບນິທານຄະຕິເຕືອນໃຈ. ພຣະທຳທຳມະດາເຫຼົ່ານີ້ແມ່ນມີຄວາມໝາຍທີ່ເລິກເຊິ່ງ ເພື່ອອະທິບາຍບັນຫາທີ່ສຳຄັນ. ແລ້ວນີ້ບໍ່ແມ່ນສິ່ງທີ່ດີທີ່ສຸດໃນພຣະທຳຂອງພຣະເຈົ້າບໍ? ເຈົ້າຮູ້ຈັກສິ່ງນີ້ບໍ?

# ບົດທີ 31

ອຸປະນິໄສຂອງພຣະເຈົ້າແມ່ນຢູ່ໃນພຣະວັດຈະນະທັງໝົດຂອງພຣະເຈົ້າ ແຕ່ຫຼັກໆແລ້ວເລື່ອງລາວຂອງພຣະທຳຂອງພຣະອົງແມ່ນກ່ຽວກັບການເປີດເຜີຍຄວາມກະບົດຂອງມະນຸດທຸກຄົນ ແລະ ການເປີດເຜີຍສິ່ງຕ່າງໆ ເຊັ່ນ: ຄວາມບໍ່ເຊື່ອຟັງ, ການຂັດຄຳສັ່ງ, ຄວາມບໍ່ຍຸຕິທຳ, ຄວາມບໍ່ຊອບທຳ ແລະ ຄວາມບໍ່ສາມາດຮັກພຣະເຈົ້າໄດ້ຢ່າງແທ້ຈິງ ຈົນຄືກັບວ່າ ພຣະທຳຂອງພຣະເຈົ້າແມ່ນໄດ້ໄປຮອດຈຸດທີ່ພຣະອົງຕ້ອງເວົ້າວ່າ ຮູຂົນທຸກຮູໃນຮ່າງກາຍຂອງຜູ້ຄົນແມ່ນມີການຕໍ່ຕ້ານພຣະເຈົ້າ, ແມ່ນແຕ່ເສັ້ນເລືອດຝອຍຂອງພວກເຂົາກໍຍັງມີການຂັດຂືນຕໍ່ພຣະເຈົ້າ. ຖ້າຜູ້ຄົນບໍ່ພະຍາຍາມກວດສອບສິ່ງເຫຼົ່ານີ້ພວກເຂົາກໍຈະບໍ່ສາມາດຮູ້ຈັກສິ່ງເຫຼົ່ານັ້ນໄດ້ຈັກເທື່ອ ແລະ ຈະບໍ່ມີວັນທີ່ຈະປະຖິ້ມສິ່ງເຫຼົ່ານັ້ນ. ຖ້າຈະເວົ້າໄປແລ້ວ ເຊື້ອຮ້າຍທີ່ຕໍ່ຕ້ານພຣະເຈົ້າຈະແຜ່ລາມໃນຕົວພວກເຂົາ ແລະ ໃນທີ່ສຸດ ມັນກໍຈະເປັນຄືກັບວ່າ ຈຸລັງເມັດເລືອດຂາວຂອງພວກເຂົາໄດ້ກືນກິນຈຸລັງເມັດເລືອດແດງ ໂດຍປ່ອຍໃຫ້ຮ່າງກາຍທັງໝົດຂອງພວກເຂົາບໍ່ມີຈຸລັງເມັດເລືອດແດງເລີຍ; ສຸດທ້າຍ ພວກເຂົາກໍຈະຕາຍຍ້ອນໂລກມະເຮັງເມັດເລືອດຂາວ. ນີ້ແມ່ນສະພາບທີ່ແທ້ຈິງຂອງມະນຸດ ແລະ ບໍ່ມີໃຜສາມາດປະຕິເສດມັນໄດ້. ຍ້ອນເກີດຢູ່ໃນດິນແດນມັງກອນແດງທີ່ຍິ່ງໃຫຍ່ນອນຂົດຢູ່, ພາຍໃນແຕ່ລະຄົນແມ່ນມີສິ່ງໃດໜຶ່ງທີ່ເປັນແບບຢ່າງ ແລະ ຕົວຢ່າງຂອງພິດຂອງມັງກອນແດງທີ່ຍິ່ງໃຫຍ່. ສະນັ້ນ, ໃນຂັ້ນຕອນຂອງພາລະກິດນີ້ເສັ້ນດ້າຍຫຼັກໃນພຣະທຳຂອງພຣະເຈົ້າແມ່ນການຮູ້ຈັກຕົວເອງ, ການປະຕິເສດຕົວເອງ, ການປະຖິ້ມຕົວເອງ ແລະ ການຂ້າຕົວເອງ. ສາມາດເວົ້າໄດ້ວ່າ ນີ້ແມ່ນພາລະກິດຫຼັກຂອງພຣະເຈົ້າໃນລະຫວ່າງຍຸກສຸດທ້າຍ ແລະ ຂັ້ນຕອນຂອງພາລະກິດນີ້ແມ່ນລະອຽດ ແລະ ທົ່ວເຖິງທີ່ສຸດ ເຊິ່ງນີ້ສະແດງໃຫ້ເຫັນວ່າພຣະເຈົ້າກຳລັງວາງແຜນ ເພື່ອເຮັດໃຫ້ຍຸກສິ້ນສຸດລົງ. ບໍ່ມີໃຜຄາດຄະເນສິ່ງນີ້ ແຕ່ໃນຂະນະດຽວກັນມັນກໍເປັນບາງສິ່ງທີ່ພວກເຂົາໄດ້ຄາດໄວ້ລ່ວງໜ້າແລ້ວໃນຄວາມຮູ້ສຶກຂອງພວກເຂົາ. ເຖິງວ່າພຣະເຈົ້າບໍ່ໄດ້ກ່າວຢ່າງຊັດເຈນ ແຕ່ຄວາມຮູ້ສຶກຂອງຜູ້ຄົນກໍໄວຫຼາຍ. ພວກເຂົາຮູ້ສຶກວ່າ ເວລາສັ້ນສະເໝີ. ເຮົາສາມາດເວົ້າວ່າ ຍິ່ງຜູ້ຄົນຮູ້ສຶກກັບສິ່ງນີ້ຫຼາຍສໍ່າໃດ ເຂົາກໍຍິ່ງມີຄວາມຮູ້ທີ່ຊັດເຈນຂຶ້ນກ່ຽວກັບຍຸກ. ມັນບໍ່ແມ່ນການເຫັນວ່າ ໂລກເປັນປົກກະຕິຢູ່ ແລະ ດ້ວຍເຫດນັ້ນ ຈຶ່ງໄດ້ປະຕິເສດພຣະທຳຂອງພຣະເຈົ້າ; ກົງກັນຂ້າມ ມັນແມ່ນການຮູ້ເຖິງເນື້ອຫາຂອງພາລະກິດຂອງພຣະເຈົ້າຜ່ານທາງສິ່ງທີ່ມີຢູ່ພາຍໃນພາລະກິດຂອງພຣະເຈົ້າ. ສິ່ງນີ້ຖືກກຳນົດໂດຍນໍ້າສຽງຂອງພຣະທຳຂອງພຣະເຈົ້າ. ມີຄວາມລັບໃນນໍ້າສຽງຂອງພຣະວັດຈະນະຂອງພຣະເຈົ້າ ເຊິ່ງບໍ່ມີໃຜຄົ້ນພົບ ແລະ ກໍເປັນທີ່ແນ່ນອນວ່າ ມັນຍັງແມ່ນສິ່ງທີ່ຍາກທີ່ສຸດສຳລັບຜູ້ຄົນໃນການເຂົ້າສູ່. ຈຸດສຳຄັນທີ່ວ່າ ເປັນຫຍັງຜູ້ຄົນຈຶ່ງບໍ່ສາມາດເຂົ້າໃຈພຣະທຳຂອງພຣະເຈົ້າກໍຄື ພວກເຂົາຍັງຄົງບໍ່ມີຄວາມຮູ້ກ່ຽວກັບນໍ້າສຽງທີ່ພຣະເຈົ້າກ່າວ ຖ້າພວກເຂົາຊຳນານກັບເຄັດລັບນີ້ ພວກເຂົາກໍຈະສາມາດມີຄວາມຮູ້ບາງຢ່າງກ່ຽວກັບພຣະທຳຂອງພຣະເຈົ້າໄດ້. ພຣະທຳຂອງພຣະເຈົ້າແມ່ນປະຕິບັດຕາມໜຶ່ງຫຼັກການຕະຫຼອດ ນັ້ນກໍຄື ການເຮັດໃຫ້ຜູ້ຄົນຮູ້ຈັກວ່າພຣະທຳຂອງພຣະເຈົ້າແມ່ນທຸກສິ່ງ ແລະ ການແກ້ໄຂຄວາມລຳບາກທັງໝົດຂອງມະນຸດຜ່ານພຣະທຳ

ຂອງພຣະເຈົ້າ. ຈາກມຸມມອງຂອງພຣະວິນຍານ ພຣະເຈົ້າເຮັດໃຫ້ການກະທຳຂອງພຣະອົງທຳມະດາ; ຈາກມຸມມອງຂອງມະນຸດ ພຣະອົງເປີດເຜີຍແນວຄິດຂອງຜູ້ຄົນ; ຈາກມຸມມອງຂອງພຣະວິນຍານ ພຣະອົງເວົ້າວ່າ ມະນຸດບໍ່ສົນໃຈກັບຄວາມປະສົງຂອງພຣະອົງ ແລະ ຈາກມຸມມອງຂອງມະນຸດ ພຣະອົງເວົ້າວ່າ ພຣະອົງໄດ້ຊີມລົດຊາດຫວານ, ສົ້ມ, ຂົມ ແລະ ຈັດຂອງປະສົບການຂອງມະນຸດ ແລະ ພຣະອົງສະເດັດມາໃນສາຍລົມ ແລະ ໄປກັບສາຍຝົນ, ພຣະອົງໄດ້ປະສົບກັບການຂົ່ມເຫັງຂອງຄອບຄົວ ແລະ ປະສົບກັບການຂຶ້ນ ແລະ ລົງຂອງຊີວິດ. ນີ້ແມ່ນພຣະທຳທີ່ກ່າວອອກມາຈາກມຸມມອງທີ່ແຕກຕ່າງກັນ. ເມື່ອພຣະອົງເວົ້າກັບປະຊາຊົນຂອງພຣະເຈົ້າ ມັນກໍຄືກັບການທີ່ຜູ້ເບິ່ງແຍງຮັກສາເຮືອນໄດ້ຮ້າຍພວກຂ້າທາດ ຫຼື ຮູບແຕ້ມຕະຫຼົກ; ພຣະທຳຂອງພຣະອົງເຮັດໃຫ້ຜູ້ຄົນໜ້າແດງ ໂດຍທີ່ບໍ່ມີບ່ອນລີ້ຈາກຄວາມອັບອາຍຂອງພວກເຂົາ ຄືກັບວ່າ ພວກເຂົາຖືກກັກຕົວໂດຍອຳນາດການປົກຄອງສັກດີນາຂອງລະບອບໃນອະດີດ ເພື່ອຮັບສາລະພາບພາຍໃຕ້ການທໍລະມານທີ່ທາລຸນ. ເມື່ອພຣະອົງເວົ້າກັບປະຊາຊົນຂອງພຣະເຈົ້າ, ພຣະເຈົ້າແມ່ນບໍ່ຖືກຈຳກັດ ເຊັ່ນດຽວກັນກັບນັກຮຽນມະຫາວິທະຍາໄລທີ່ເປີດໂປງເລື່ອງເສຍຫາຍ ທີ່ຢູ່ພາຍໃນລັດຖະບານກາງ. ຖ້າພຣະທຳທຸກຂໍ້ຂອງພຣະເຈົ້າເປັນການເຍາະເຍີ້ຍ, ສິ່ງເຫຼົ່ານັ້ນກໍຈະຍາກທີ່ຜູ້ຄົນຈະຍອມຮັບໄດ້; ສະນັ້ນ ພຣະທຳທີ່ກ່າວໂດຍພຣະເຈົ້າຈຶ່ງກົງໄປກົງມາ; ບໍ່ມີສິ່ງທີ່ບໍ່ສຳຄັນສຳລັບມະນຸດ ແຕ່ຊີ້ໃຫ້ເຫັນສະພາບຕົວຈິງຂອງມະນຸດໂດຍກົງ ເຊິ່ງສະແດງໃຫ້ເຫັນວ່າ ຄວາມຮັກຂອງພຣະເຈົ້າຕໍ່ມະນຸດບໍ່ແມ່ນພຽງແຕ່ຄຳເວົ້າ ແຕ່ມັນຄືຄວາມເປັນຈິງ. ເຖິງວ່າ ຜູ້ຄົນຈະຖືເອົາຄວາມແທ້ຈິງເປັນສິ່ງທີ່ມີຄ່າ ແຕ່ບໍ່ມີຄວາມແທ້ຈິງກ່ຽວກັບຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າເລີຍ. ນີ້ແມ່ນສິ່ງທີ່ມະນຸດຂາດ. ຖ້າຄວາມຮັກຂອງຜູ້ຄົນ ທີ່ມີຕໍ່ພຣະເຈົ້າບໍ່ມີຄວາມແທ້ຈິງ ແລ້ວທຸກສິ່ງທຸກຢ່າງກໍຈະວ່າງເປົ່າ ແລະ ເປັນພາບລວງຕາ ຄືກັບວ່າ ທຸກສິ່ງຈະຫາຍໄປເພາະສິ່ງນີ້. ຖ້າຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າເໜືອກວ່າຈັກກະວານ ແລ້ວສະຖານະ ແລະ ຕົວຕົນຂອງພວກເຂົາກໍຈະເປັນຈິງ ແລະ ບໍ່ວ່າງເປົ່າ ແລະ ແມ່ນແຕ່ພຣະທຳເຫຼົ່ານີ້ ກໍຈະເປັນຈິງ ແລະ ບໍ່ວ່າງເປົ່າ ກໍຈະເປັນເຊັ່ນນັ້ນຄືກັນ. ເຈົ້າເຫັນສິ່ງນີ້ບໍ? ເຈົ້າເຫັນຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ມະນຸດບໍ? ມະນຸດບໍ່ຄວນແຕ່ເພີດເພີນກັບຜົນປະໂຫຍດດ້ານສະຖານະເທົ່ານັ້ນ ແຕ່ຄວນດຳລົງຊີວິດຕາມສະຖານະແທ້ຈິງ. ນີ້ແມ່ນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກປະຊາຊົນຂອງພຣະເຈົ້າ ແລະ ຈາກມະນຸດທຸກຄົນ ແລະ ນີ້ບໍ່ແມ່ນພຽງທິດສະດີທີ່ຍິ່ງໃຫຍ່ທີ່ວ່າງເປົ່າເທົ່ານັ້ນ.

ເປັນຫຍັງພຣະເຈົ້າຈຶ່ງກ່າວວ່າ ພຣະທຳປະເພດນີ້ແມ່ນ, "ຄືກັບວ່າ ທຸກສິ່ງທີ່ເຮົາເຮັດແມ່ນການພະຍາຍາມເຮັດໃຫ້ພວກເຂົາພໍໃຈ ເຊິ່ງດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ພວກເຂົາລັງກຽດການກະທຳຂອງເຮົາສະເໝີ"? ເຈົ້າສາມາດເວົ້າໄດ້ບໍ ກ່ຽວກັບການສະແດງອອກທີ່ແທ້ຈິງ ຕໍ່ການກຽດຊັງພຣະເຈົ້າຂອງມະນຸດ? ໃນແນວຄິດຂອງຜູ້ຄົນ, ມະນຸດ ແລະ ພຣະເຈົ້າແມ່ນ "ມີຄວາມຮັກຢ່າງຫຼົງໄຫຼ" ແລະ ໃນປັດຈຸບັນ ການສະແຫວງຫາຂອງຜູ້ຄົນຕໍ່ພຣະທຳຂອງພຣະເຈົ້າແມ່ນໄດ້ໄປຮອດຈຸດທີ່ວ່າ ພວກເຂົາປາດຖະໜາຢ່າງກະຕືລືລົ້ນທີ່ຈະກືນພຣະເຈົ້າດ້ວຍຄຳດຽວ, ເຖິງຢ່າງໃດກໍຕາມ ພຣະເຈົ້າກໍໄດ້ກ່າວພຣະທຳດັ່ງຕໍ່ໄປນີ້: "ມະນຸດກຽດຊັງເຮົາ. ເປັນຫຍັງຄວາມຮັກຂອງເຮົາຈຶ່ງຖືກຕອບແທນດ້ວຍຄວາມ

ກຽດຊັງຂອງມະນຸດ?" ນີ້ບໍ່ແມ່ນແຫຼ່ງສະສົມຂອງແຮ່ທາດທີ່ຢູ່ພາຍໃນຜູ້ຄົນບໍ? ນີ້ບໍ່ແມ່ນສິ່ງທີ່ຄວນຖືກຂຸດອອກມາບໍ? ນີ້ແມ່ນຂໍ້ບົກຜ່ອງໃນການສະແຫວງຫາຂອງຜູ້ຄົນ; ມັນແມ່ນບັນຫາໃຫຍ່ທີ່ຄວນຖືກແກ້ໄຂ ແລະ ມັນແມ່ນໂຕສິ່ງທີ່ຢືນຂວາງທາງແຫ່ງຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າ ແລະເປັນສິ່ງທີ່ຕ້ອງກຳຈັດອອກຈາກມະນຸດ. ນີ້ບໍ່ແມ່ນສິ່ງທີ່ຄວນເຮັດບໍ? ຍ້ອນວ່າ ຄືກັບໝູ ມະນຸດແມ່ນບໍ່ມີຄວາມຊົງຈຳ ແລະ ປາດຖະໜາຄວາມສຸກຕະຫຼອດ, ພຣະເຈົ້າຈຶ່ງເອົາຢາແກ້ຄວາມຈຳເສື່ອມໃຫ້ແກ່ມະນຸດ: ພຣະອົງກ່າວຫຼາຍຂຶ້ນ, ເວົ້າຫຼາຍຂຶ້ນ ແລະ ພຣະອົງດຶງຫູຂອງຜູ້ຄົນ ແລະ ເຮັດໃຫ້ພວກເຂົາຟັງຢູ່ໃກ້ໆ ແລະ ພຣະອົງເອົາເຄື່ອງຊ່ວຍຟັງໃຫ້ພວກເຂົາໃຊ້. ສຳລັບພຣະທຳບາງຂໍ້ຂອງພຣະອົງ, ການກ່າວພຽງຄັ້ງດຽວເທົ່ານັ້ນແມ່ນບໍ່ສາມາດແກ້ໄຂບັນຫາໄດ້; ສິ່ງເຫຼົ່ານັ້ນຈະຕ້ອງຖືກກ່າວຊໍ້າແລ້ວຊໍ້າອີກເນື່ອງຈາກວ່າ "ຜູ້ຄົນຈຶ່ງທົນທຸກກັບຄວາມຫຼົງລືມໃນຊີວິດຂອງພວກເຂົາຕະຫຼອດ ແລະ ມື້ຕ່າງໆໃນຊີວິດຂອງມະນຸດທຸກຄົນກໍຢູ່ໃນຄວາມສັບສົນ". ດ້ວຍວິທີນີ້ ຜູ້ຄົນແມ່ນສາມາດຖືກຊ່ວຍໃຫ້ລອດພົ້ນຈາກສະພາບທີ່ "ພວກເຂົາອ່ານໃນຕອນທີ່ພວກເຂົາມີເວລາ, ຟັງໃນຕອນທີ່ພວກເຂົາວ່າງ ແລະ ປ່ອຍໃຫ້ພວກເຂົາຢູ່ລຳພັງໃນຕອນທີ່ພວກເຂົາບໍ່ມີເວລາ; ຖ້າມີການກ່າວພຣະທຳໃນມື້ນີ້ ພວກເຂົາກໍຈະໃຫ້ຄວາມສົນໃຈ ແຕ່ພວກເຂົາກໍຈະເອົາພຣະທຳເຫຼົ່ານັ້ນປະໄວ້ເບື້ອງຫຼັງແນວຄິດຂອງພວກເຂົາ ຖ້າບໍ່ມີການກ່າວພຣະທຳໃນມື້ອື່ນອີກ". ສຳລັບກ່ຽວກັບທຳມະຊາດຂອງຜູ້ຄົນແລ້ວ, ຖ້າໃນປັດຈຸບັນ ພຣະເຈົ້າໄດ້ກ່າວເຖິງສະພາບທີ່ແທ້ຈິງຂອງພວກເຂົາ ແລະ ພວກເຂົາມີຄວາມຮູ້ຢ່າງທົ່ວເຖິງກ່ຽວກັບສິ່ງນັ້ນແລ້ວພວກເຂົາກໍຈະເຕັມໄປດ້ວຍຄວາມເສຍໃຈ ແຕ່ຫຼັງຈາກນັ້ນ ພວກເຂົາກໍຈະກັບໄປເຮັດຄືເກົ່າ, ປະຖິ້ມພຣະທຳຂອງພຣະເຈົ້າໃຫ້ກັບສາຍລົມ ແລະ ເມື່ອຖືກເຕືອນເທົ່ານັ້ນ ກໍຈະເຮັດສິ່ງທີ່ກ່າວມາຂ້າງເທິງນັ້ນຄືນໃໝ່. ສະນັ້ນ, ເມື່ອເຈົ້າເຮັດພາລະກິດ ຫຼື ເວົ້າ, ຈົ່ງຢ່າລືມທາດແທ້ຂອງມະນຸດ; ມັນຈະເປັນສິ່ງທີ່ຜິດພາດ ທີ່ຈະປະຖິ້ມທາດແທ້ນີ້ໃນຂະນະທີ່ກຳລັງເຮັດພາລະກິດ. ໃນການເຮັດພາລະກິດທັງໝົດ, ມັນມີຄວາມສຳຄັນເປັນພິເສດ ທີ່ຈະກ່າວເຖິງແນວຄິດຂອງຜູ້ຄົນເວລາເຈົ້າເວົ້າ. ໂດຍສະເພາະແລ້ວເຈົ້າຄວນເພີ່ມຄວາມຢັ່ງຮູ້ຂອງຕົວເອງເຂົ້າໃນພຣະທຳຂອງພຣະເຈົ້າ ແລະ ເວົ້າສິ່ງເຫຼົ່ານັ້ນ. ນີ້ແມ່ນເສັ້ນທາງໃນການສະໜອງໃຫ້ແກ່ຜູ້ຄົນ ແລະ ເຮັດໃຫ້ພວກເຂົາຮູ້ຈັກຕົວເອງ. ໃນການສະໜອງໃຫ້ແກ່ຜູ້ຄົນໂດຍອີງຕາມເນື້ອຫາໃນພຣະທຳຂອງພຣະເຈົ້າ, ມັນຈະເປັນໄປໄດ້ ທີ່ຈະເຂົ້າໃຈສະພາບທີ່ແທ້ຈິງຂອງພວກເຂົາຢ່າງຫຼີກເວັ້ນບໍ່ໄດ້. ໃນພຣະທຳຂອງພຣະເຈົ້າ ມັນພຽງພໍແລ້ວທີ່ຈະເຂົ້າໃຈສະພາບທີ່ແທ້ຈິງຂອງມະນຸດ ແລະ ດ້ວຍເຫດນັ້ນ ກໍຈະເປັນການສະໜອງໃຫ້ແກ່ພວກເຂົາ ແລະ ເພາະສະນັ້ນ ເຮົາຈຶ່ງຈະບໍ່ກ່າວພຣະທຳຂອງພຣະເຈົ້າອີກ ໂດຍການຊີ້ໃຫ້ເຫັນວ່າ "ພຣະເຈົ້າໄດ້ຍອມຮັບຄຳເຊີນແລ້ວ ທີ່ຈະໄປນັ່ງຢູ່ໂຕະງານລ້ຽງຢູ່ເທິງແຜ່ນດິນໂລກ".

# ບົດທີ 32

ພຣະທຳຂອງພຣະເຈົ້າປ່ອຍໃຫ້ຜູ້ຄົນເກົາຫົວ; ມັນຄືກັບວ່າເມື່ອພຣະອົງກ່າວ ພຣະເຈົ້າກຳລັງຫຼີກເວັ້ນມະນຸດ ແລະ ກ່າວຕໍ່ອາກາດ, ຄືກັບວ່າພຣະອົງບໍ່ມີຄວາມຄິດທີ່ຈະໃສ່ໃຈການກະທຳຂອງມະນຸດອີກເລີຍ ແລະ ບໍ່ສົນໃຈຕໍ່ວຸດທິພາວະຂອງມະນຸດຢ່າງສິ້ນເຊີງ, ຄືກັບວ່າພຣະທຳທີ່ພຣະອົງກ່າວບໍ່ໄດ້ແນໃສ່ແນວຄິດຂອງຜູ້ຄົນ, ແຕ່ຫຼີກເວັ້ນມະນຸດ ຕາມເຈດຕະນາເດີມຂອງພຣະເຈົ້າ. ຍ້ອນເຫດຜົນຫຼາຍຢ່າງ ທີ່ມະນຸດບໍ່ສາມາດເຂົ້າໃຈ ແລະ ເຂົ້າເຖິງພຣະທຳຂອງພຣະເຈົ້າໄດ້. ສິ່ງນີ້ບໍ່ແມ່ນເລື່ອງປະຫຼາດ. ຈຸດປະສົງເດີມຂອງພຣະທຳທຸກຂໍ້ຂອງພຣະເຈົ້າບໍ່ແມ່ນໃຫ້ຜູ້ຄົນໄດ້ຮັບຄວາມຮູ້ ຫຼື ຮຽນຮູ້ກົນອຸບາຍຈາກພຣະທຳເຫຼົ່ານັ້ນ; ກົງກັນຂ້າມ ສິ່ງເຫຼົ່ານັ້ນເປັນວິທີທາງໜຶ່ງທີ່ພຣະເຈົ້າໄດ້ປະຕິບັດພາລະກິດຕັ້ງແຕ່ຕອນເລີ່ມຕົ້ນຈົນເຖິງປັດຈຸບັນ. ແນ່ນອນວ່າຜູ້ຄົນຮັບເອົາສິ່ງຕ່າງໆຈາກພຣະທຳຂອງພຣະເຈົ້າ: ສິ່ງຕ່າງໆທີ່ກ່ຽວຂ້ອງກັບຄວາມເລິກລັບ ຫຼື ສິ່ງຕ່າງໆທີ່ກ່ຽວພັນກັບເປໂຕ, ໂປໂລ ແລະ ໂຢບ, ແຕ່ນີ້ແມ່ນສິ່ງທີ່ພວກເຂົາຄວນບັນລຸ ແລະ ສິ່ງທີ່ພວກເຂົາສາມາດບັນລຸໄດ້ ແລະ ຕາມທີ່ເໝາະສົມກັບວຸດທິພາວະຂອງພວກເຂົາ, ພວກເຂົາໄດ້ເຮັດສຸດຄວາມສາມາດຂອງພວກເຂົາແລ້ວໃນການຮັບເອົາສິ່ງເຫຼົ່ານີ້. ເປັນຫຍັງຜົນທີ່ພຣະເຈົ້າຮຽກຮ້ອງໃຫ້ບັນລຸຈຶ່ງບໍ່ສູງ, ແຕ່ເຖິງຢ່າງນັ້ນ ພຣະອົງກໍຍັງກ່າວພຣະທຳຫຼາຍຂໍ້? ສິ່ງນີ້ແມ່ນພົວພັນກັບການຂ້ຽນຕີທີ່ພຣະອົງກ່າວ ແລະ ໂດຍທຳມະຊາດແລ້ວມັນລ້ວນແລ້ວແຕ່ຖືກບັນລຸໂດຍທີ່ຜູ້ຄົນບໍ່ຮູ້. ໃນປັດຈຸບັນ ຜູ້ຄົນອິດກັ້ນກັບການທົນທຸກຫຼາຍຂຶ້ນພາຍໃຕ້ການໂຈມຕີຈາກພຣະທຳຂອງພຣະເຈົ້າ. ໂດຍຜິວເຜີນແລ້ວ, ບໍ່ມີໃຜໃນບັນດາພວກເຂົາ ຄືກັບວ່າ ຖືກຈັດການແລ້ວ, ຜູ້ຄົນໄດ້ເລີ່ມເປັນອິດສະຫຼະໃນການປະຕິບັດພາລະກິດຂອງພວກເຂົາ ແລະ ຜູ້ບໍລິການຖືກຍົກລະດັບໃຫ້ເປັນປະຊາຊົນຂອງພຣະເຈົ້າ ເຊິ່ງໃນສິ່ງນີ້, ປາກົດວ່າ ພວກເຂົາໄດ້ເຂົ້າສູ່ຄວາມສຸກແລ້ວ. ແທ້ຈິງແລ້ວ, ຄວາມເປັນຈິງກໍຄື ຈາກການຫຼົ່ຫຼອມ ພວກເຂົາທຸກຄົນໄດ້ເຂົ້າສູ່ການຂ້ຽນຕີຢ່າງຮຸນແຮງຍິ່ງຂຶ້ນ. ດັ່ງທີ່ພຣະເຈົ້າກ່າວວ່າ "ຂັ້ນຕອນຂອງພາລະກິດຂອງເຮົາແມ່ນເຊື່ອມໂຍງກັບຂັ້ນຕອນຕໍ່ໄປຢ່າງຕໍ່ເນື່ອງ, ແຕ່ລະຂັ້ນຕອນແມ່ນສູງຂຶ້ນເລື້ອຍໆ". ພຣະເຈົ້າຍົກຜູ້ບໍລິການອອກຈາກເຫວເລິກທີ່ສຸດ ແລະ ໂຍນພວກເຂົາລົງສູ່ທະເລສາບແຫ່ງໄຟ ແລະ ມາດ, ເຊິ່ງເປັນບ່ອນທີ່ການຂ້ຽນຕີຍິ່ງຮ້າຍແຮງຫຼາຍຂຶ້ນ. ສະນັ້ນ ພວກເຂົາຈຶ່ງທົນທຸກກັບຄວາມລຳບາກຫຼາຍຍິ່ງຂຶ້ນ ໂດຍທີ່ພວກເຂົາເກືອບບໍ່ສາມາດຫຼົບໜີໄດ້. ການຂ້ຽນຕີດັ່ງກ່າວບໍ່ຮ້າຍແຮງກວ່າເກົ່າບໍ? ເມື່ອໄດ້ເຂົ້າສູ່ອານາຈັກທີ່ສູງກວ່າ, ເປັນຫຍັງຜູ້ຄົນຈຶ່ງຮູ້ສຶກເສຍໃຈແທນທີ່ຈະມີຄວາມສຸກ? ເປັນຫຍັງຈຶ່ງເວົ້າວ່າເມື່ອຖືກໄຖ່ຈາກມືຂອງຊາຕານ, ພວກເຂົາແມ່ນຖືກມອບໃຫ້ກັບມັງກອນແດງໃຫຍ່? ເຈົ້າຈື່ບໍ ໃນເວລາພຣະເຈົ້າເວົ້າວ່າ ສ່ວນສຸດທ້າຍຂອງພາລະກິດແມ່ນຖືກເຮັດໃຫ້ສຳເລັດໃນເຮືອນຂອງມັງກອນແດງໃຫຍ່? ເຈົ້າຈື່ບໍ ເມື່ອພຣະເຈົ້າເວົ້າວ່າ "ຄວາມລຳບາກສຸດທ້າຍກໍຄືການເປັນພະຍານທີ່ໜັກແໜ້ນ ແລະ ກຶກກ້ອງໃຫ້ກັບພຣະເຈົ້າຕໍ່ໜ້າມັງກອນແດງໃຫຍ່"? ຖ້າຜູ້ຄົນບໍ່ໄດ້ຖືກມອບໃຫ້ກັບມັງກອນແດງໃຫຍ່, ພວກເຂົາຈະສາມາດເປັນພະຍານຕໍ່ໜ້າມັນໄດ້ແນວໃດ? ໃຜເຄີຍເວົ້າຄຳເວົ້າທີ່ວ່າ "ຂ້ານ້ອຍ

ໄດ້ເອົາຊະນະຜີຮ້າຍ" ຫຼັງຈາກທີ່ໄດ້ຂ້າຕົວເອງ? ການເຫັນເນື້ອໜັງຂອງຕົວເອງເປັນສັດຕູ ແລະ ຫຼັງຈາກນັ້ນກໍຂ້າຕົວເອງ. ຄວາມໝາຍແທ້ຈິງຂອງສິ່ງນີ້ມີຢູ່ໃສ? ເປັນຫຍັງພຣະເຈົ້າຈຶ່ງເວົ້າແບບນັ້ນ? "ເຮົາບໍ່ຫຼຽວເບິ່ງຮອຍແປ້ວຂອງຜູ້ຄົນ, ແຕ່ຫຼຽວເບິ່ງສ່ວນໃດໃນພວກເຂົາທີ່ບໍ່ມີຮອຍແປ້ວ ແລະ ຈາກສິ່ງນີ້ ເຮົາກໍພໍໃຈແລ້ວ". ຖ້າມັນແມ່ນຄວາມຈິງທີ່ພຣະເຈົ້າປາຖະໜາທີ່ຈະໃຫ້ຄົນທີ່ບໍ່ມີຮອຍແປ້ວເປັນການສະແດງອອກຂອງພຣະອົງ, ເປັນຫຍັງພຣະອົງຈຶ່ງກ່າວພຣະທຳຫຼາຍຂໍ້ຢ່າງໃຈເຢັນ ແລະ ຢ່າງຈິງໃຈຈາກທັດສະນະຂອງມະນຸດເພື່ອໂຕ້ຕອບກັບແນວຄິດຂອງຜູ້ຄົນ? ເປັນຫຍັງພຣະອົງຈຶ່ງເຮັດໃຫ້ຕົວເອງກັງວົນກ່ຽວກັບສິ່ງນັ້ນ? ເປັນຫຍັງພຣະອົງຈຶ່ງລຳບາກໂດຍບໍ່ຈຳເປັນໃນການເຮັດສິ່ງດັ່ງກ່າວ? ສະນັ້ນ ຈຶ່ງສະແດງໃຫ້ເຫັນວ່າ ມັນມີຄວາມໝາຍທີ່ແທ້ຈິງໃນການບັງເກີດເປັນມະນຸດຂອງພຣະເຈົ້າ, ພຣະອົງຈະບໍ່ "ເມີນເສີຍ" ຕໍ່ເນື້ອໜັງຫຼັງຈາກທີ່ກາຍມາເປັນເນື້ອໜັງ ແລະ ເຮັດໃຫ້ພາລະກິດຂອງພຣະອົງສຳເລັດ. ເປັນຫຍັງຈຶ່ງເວົ້າວ່າ "ທອງຄຳບໍ່ສາມາດບໍລິສຸດໄດ້ ແລະ ມະນຸດບໍ່ສາມາດສົມບູນໄດ້"? ພຣະທຳເຫຼົ່ານີ້ຈະສາມາດອະທິບາຍໄດ້ແນວໃດ? ພຣະທຳຂອງພຣະອົງແມ່ນໝາຍເຖິງຫຍັງເມື່ອພຣະເຈົ້າກ່າວເຖິງທາດແທ້ຂອງມະນຸດ? ໃນສາຍຕາຂອງຜູ້ຄົນ, ເນື້ອໜັງປາກົດວ່າບໍ່ມີຄວາມສາມາດເຮັດຫຍັງໄດ້ເລີຍ ຫຼື ບໍ່ດັ່ງນັ້ນມັນກໍຈະປາກົດວ່າມີການຂາດເຂີນເກີນໄປ. ໃນສາຍຕາຂອງພຣະເຈົ້າ, ສິ່ງນີ້ບໍ່ໄດ້ສຳຄັນເລີຍ, ແຕ່ສຳລັບຜູ້ຄົນ, ມັນເປັນບັນຫາທີ່ມີຄວາມສຳຄັນຫຼາຍ. ມັນເປັນຄືກັບວ່າ ພວກເຂົາບໍ່ສາມາດແກ້ໄຂສິ່ງນີ້ໄດ້ທັງໝົດ, ຄືກັບວ່າຕ້ອງຖືກຈັດການໂດຍຮ່າງກາຍຈາກສະຫວັນໂດຍກົງ, ສິ່ງນີ້ບໍ່ແມ່ນແນວຄິດຂອງມະນຸດບໍ? "ໃນສາຍຕາຂອງຜູ້ຄົນ, ເຮົາເປັນພຽງ 'ດາວດວງນ້ອຍ' ທີ່ໄດ້ລົງມາຈາກທ້ອງຟ້າ, ດາວດວງນ້ອຍໃນສະຫວັນ ແລະ ການທີ່ເຮົາມາເຖິງແຜ່ນດິນໂລກໃນມື້ນີ້ກໍຍ້ອນໄດ້ຖືກມອບໝາຍໜ້າທີ່ໂດຍພຣະເຈົ້າ. ຜົນຕາມມາກໍຄື ຜູ້ຄົນພາກັນຕີຄວາມໝາຍອອກໄປຕ່າງໆນາໆກ່ຽວກັບຄຳວ່າ 'ເຮົາ' ແລະ 'ພຣະເຈົ້າ'". ຍ້ອນມະນຸດບໍ່ໄດ້ເທົ່າທຽມກັບຫຍັງເລີຍ, ແລ້ວເປັນຫຍັງພຣະເຈົ້າຈຶ່ງຈະເປີດເຜີຍແນວຄິດຂອງພວກເຂົາຈາກທັດສະນະທີ່ແຕກຕ່າງ? ສິ່ງນີ້ກໍຍັງແມ່ນສະຕິປັນຍາຂອງພຣະເຈົ້າຢູ່ບໍ? ແລ້ວພຣະທຳດັ່ງກ່າວບໍ່ເປັນຕາຢາກຫົວບໍ? ດັ່ງທີ່ພຣະເຈົ້າເວົ້າວ່າ "ເຖິງແມ່ນມີຫ້ອງທີ່ເຮົາໄດ້ສ້າງຂຶ້ນໃນຫົວໃຈຂອງຜູ້ຄົນ, ພວກເຂົາກໍບໍ່ຕ້ອງການໃຫ້ເຮົາອາໄສຢູ່ໃນນັ້ນ. ກົງກັນຂ້າມ, ພວກເຂົາລໍຖ້າ 'ຜູ້ສັກສິດ' ໃນຫົວໃຈຂອງພວກເຂົາໃຫ້ມາເຖິງໃນໄວໆ. ຍ້ອນຕົວຕົນຂອງເຮົາ 'ຕໍ່າຕ້ອຍ' ເກີນໄປ, ເຮົາຈຶ່ງບໍ່ເໝາະສົມກັບຄວາມຮຽກຮ້ອງຂອງຜູ້ຄົນ ແລະ ສະນັ້ນຈຶ່ງຖືກພວກເຂົາປະຖິ້ມ". ເພາະຍ້ອນຜູ້ຄົນປະເມີນພຣະເຈົ້ານັ້ນ "ສູງເກີນໄປ", ພຣະເຈົ້າຈຶ່ງ "ບໍ່ສາມາດບັນລຸ" ຫຼາຍໆສິ່ງ ເຊິ່ງໄດ້ເຮັດໃຫ້ພຣະອົງຕົກຢູ່ໃນ "ຄວາມຫຍຸ້ງຍາກ". ຜູ້ຄົນບໍ່ຮູ້ຈັກເລີຍວ່າ ສິ່ງທີ່ພວກເຂົາຮຽກຮ້ອງໃຫ້ພຣະເຈົ້າເປັນນັ້ນ ແມ່ນອີງຕາມແນວຄິດຂອງພວກເຂົາ. ແລ້ວສິ່ງນີ້ບໍ່ແມ່ນຄວາມໝາຍແທ້ຈິງຂອງຄຳວ່າ "ຄົນສະຫຼາດອາດຕົກເປັນເຫຍື່ອແຫ່ງຄວາມສະຫຼາດຂອງຕົນເອງບໍ"? ນີ້ແມ່ນກໍລະນີທີ່ວ່າ "ສະຫຼາດດັ່ງກົດລະບຽບ, ແຕ່ເທື່ອນີ້ເປັນຄົນໂງ່"! ໃນການເທດສະໜາຂອງພວກເຈົ້າ, ພວກເຈົ້າຮຽກຮ້ອງໃຫ້ຜູ້ຄົນຈັດການກັບພຣະເຈົ້າທີ່ມາຈາກແນວຄິດຂອງພວກເຂົາ ແລະ ແລ້ວພຣະເຈົ້າທີ່ມາຈາກແນວຄິດຂອງພວກເຈົ້າກໍໄດ້ໝົດໄປຢູ່ບໍ? ພຣະທຳຂອງພຣະເຈົ້າທີ່ວ່າ "ຄວາມ

ຕ້ອງການທີ່ເຮົາຮຽກຮ້ອງຈາກມະນຸດແມ່ນບໍ່ຫຼາຍ" ຈະສາມາດຕີຄວາມໝາຍວ່າແນວໃດ? ພຣະທຳເຫຼົ່ານັ້ນບໍ່ແມ່ນເພື່ອເຮັດໃຫ້ຜູ້ຄົນຄິດລົບ ແລະ ເປັນຄົນເສເພ, ແຕ່ເພື່ອມອບຄວາມເຂົ້າໃຈທີ່ບໍລິສຸດກ່ຽວກັບພຣະທຳຂອງພຣະເຈົ້າໃຫ້ກັບພວກເຂົາ, ພວກເຈົ້າເຂົ້າໃຈບໍ? ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນ "'ເຮົາ' ຜູ້ທີ່ສູງສົ່ງ ແລະ ຍິ່ງໃຫຍ່" ດັ່ງທີ່ຜູ້ຄົນຈິນຕະນາການແທ້ບໍ?

ເຖິງແມ່ນມີຄົນທີ່ໄດ້ອ່ານພຣະທຳທັງໝົດທີ່ພຣະເຈົ້າກ່າວ ແລະ ສາມາດໃຫ້ໂຄງຮ່າງທົ່ວໄປຂອງພຣະທຳເຫຼົ່ານັ້ນ, ມີຜູ້ໃດສາມາດເວົ້າໄດ້ບໍ່ວ່າ ຈຸດປະສົງສຸດທ້າຍຂອງພຣະເຈົ້າແມ່ນຫຍັງ? ນີ້ແມ່ນສິ່ງທີ່ມະນຸດຊາດຂາດ. ບໍ່ວ່າພຣະເຈົ້າຈະເວົ້າຈາກທັດສະນະຫຍັງກໍຕາມ, ຈຸດປະສົງໂດຍລວມຂອງພຣະອົງກໍຄືເຮັດໃຫ້ຜູ້ຄົນຮູ້ຈັກພຣະເຈົ້າທີ່ຢູ່ໃນເນື້ອໜັງ. ຖ້າບໍ່ມີຫຍັງກ່ຽວກັບຄວາມເປັນມະນຸດໃນພຣະອົງ, ຖ້າທຸກສິ່ງທີ່ພຣະອົງມີຄືລັກສະນະຂອງພຣະເຈົ້າທີ່ຢູ່ໃນສະຫວັນ, ແລ້ວກໍບໍ່ຈຳເປັນທີ່ຈະໃຫ້ພຣະເຈົ້າເວົ້າຫຼາຍແບບນັ້ນ. ມັນສາມາດເວົ້າໄດ້ວ່າ ສິ່ງທີ່ຜູ້ຄົນຂາດແມ່ນຖືກໃຊ້ເປັນເຄື່ອງມື ມືໜຶ່ງທີ່ກ່ຽວພັນກັບພຣະທຳຂອງພຣະເຈົ້າ. ນີ້ໝາຍຄວາມວ່າ ສິ່ງທີ່ຖືກສະແດງອອກໃນມະນຸດຄືເບື້ອງຫຼັງທີ່ພຣະເຈົ້າເວົ້າກ່ຽວກັບແນວຄິດຂອງຜູ້ຄົນ ແລະ ສະນັ້ນ ຜູ້ຄົນຈຶ່ງຮັບຟັງຖ້ອຍຄຳຂອງພຣະເຈົ້າ. ໂດຍທຳມະຊາດແລ້ວ ສິ່ງນີ້ແມ່ນອີງຕາມສິ່ງທີ່ພຣະເຈົ້າເວົ້າກ່ຽວກັບແນວຄິດຂອງມະນຸດ, ມີພຽງແຕ່ໃນວິທີນີ້ເທົ່ານັ້ນສິ່ງນີ້ຈຶ່ງສາມາດເວົ້າໄດ້ວ່າເປັນການປະສົມປະສານລະຫວ່າງທິດສະດີ ແລະ ຄວາມເປັນຈິງ, ມີພຽງແຕ່ເມື່ອນັ້ນ ຜູ້ຄົນຈຶ່ງຈະຖືກເຮັດໃຫ້ຈິງຈັງກ່ຽວກັບການຮູ້ຈັກຕົນເອງຢ່າງມີປະສິດຕິພາບຫຼາຍຂຶ້ນ. ມັນຈະມີປະໂຫຍດຫຍັງຖ້າພຣະເຈົ້າທີ່ຢູ່ໃນເນື້ອໜັງສາມາດເຂົ້າກັບແນວຄິດຂອງຜູ້ຄົນໄດ້ ແລະ ຖ້າພຣະເຈົ້າຍັງເປັນພະຍານເຖິງພຣະອົງ? ມັນເປັນຍ້ອນສິ່ງນີ້ແທ້ໆທີ່ພຣະເຈົ້າຕ້ອງປະຕິບັດພາລະກິດຈາກດ້ານລົບ ໂດຍໃຊ້ແນວຄິດຂອງຜູ້ຄົນເພື່ອສະແດງເຖິງລິດອຳນາດທີ່ຍິ່ງໃຫຍ່ຂອງພຣະອົງ. ສິ່ງນີ້ບໍ່ແມ່ນສະຕິປັນຍາຂອງພຣະເຈົ້າບໍ? ທຸກສິ່ງທີ່ພຣະເຈົ້າເຮັດສຳລັບທຸກຄົນແມ່ນດີໝົດ, ແລ້ວເປັນຫຍັງຈຶ່ງບໍ່ສັນລະເສີນໃນເວລານີ້? ຖ້າສິ່ງນີ້ໄປເຖິງຈຸດໃດໜຶ່ງ ຫຼື ຖ້າມື້ນັ້ນມາເຖິງ, ເຈົ້າຈະສາມາດກ່າວຄຳອະທິຖານຈາກສ່ວນເລິກທີ່ຢູ່ພາຍໃນຕົນເອງ ໃນທ່າມກາງການທົດລອງຄືກັບເປໂຕບໍ? ມີພຽງແຕ່ເມື່ອເຈົ້າຢູ່ໃນກຳມືຂອງຊາຕານ ແລ້ວຍັງສາມາດສັນລະເສີນພຣະເຈົ້າຄືກັບເປໂຕ, ມັນຈຶ່ງຈະເປັນຄວາມໝາຍທີ່ແທ້ຈິງຂອງ "ການເປັນອິດສະຫຼະຈາກການເປັນທາດຂອງຊາຕານ, ການເອົາຊະນະເນື້ອໜັງ ແລະ ການເອົາຊະນະຊາຕານ". ສິ່ງນີ້ບໍ່ແມ່ນການເປັນພະຍານແທ້ຈິງສຳລັບພຣະເຈົ້າບໍ? ມີພຽງແຕ່ສິ່ງນີ້ເທົ່ານັ້ນທີ່ບັນລຸຜົນໂດຍ "ຄວາມເປັນພຣະເຈົ້າທີ່ມາເພື່ອປະຕິບັດ ແລະ ພຣະວິນຍານທີ່ຮຸນແຮງເຈັດເທົ່າທີ່ກຳລັງປະຕິບັດພາລະກິດໃນມະນຸດ" ແລະ ເຊັ່ນດຽວກັນ ທຸກສິ່ງນີ້ກໍບັນລຸຜົນໂດຍ "ພຣະວິນຍານທີ່ອອກມາຈາກເນື້ອໜັງ" ເຊັ່ນກັນ. ແລ້ວການກະທຳດັ່ງກ່າວບໍ່ໄດ້ເປັນຈິງບໍ? ເຈົ້າເຄີຍໃສ່ໃຈກັບຄວາມເປັນຈິງ, ແຕ່ເຈົ້າມີຄວາມຮູ້ທີ່ແທ້ຈິງກ່ຽວກັບຄວາມເປັນຈິງໃນປັດຈຸບັນບໍ? "ຄວາມຕ້ອງການທີ່ເຮົາຮຽກຮ້ອງຈາກມະນຸດແມ່ນບໍ່ຫຼາຍ, ແຕ່ຜູ້ຄົນກໍເຊື່ອອີກແບບໜຶ່ງ. ສະນັ້ນ 'ຄວາມຖ່ອມຕົນ' ຂອງພວກເຂົາຈຶ່ງຖືກເປີດເຜີຍຢູ່ໃນການເຄື່ອນໄຫວທຸກຢ່າງຂອງພວກເຂົາ. ພວກເຂົາມັກຮັບຜິດຊອບຢ່າງໄປກ່ອນເຮົາເພື່ອນຳທາງເຮົາຢູ່ສະເໝີ ໂດຍຢ້ານຢູ່ເລິກໆວ່າເຮົາຈະຫຼົງ

ທາງ, ຢ້ານວ່າເຮົາຈະຍ່າງຫຼົງໄປໃນປ່າເກົ່າແກ່ທີ່ຢູ່ເລິກໃນພູເຂົາ. ຜົນຕາມມາກໍຄື ຜູ້ຄົນນຳທາງເຮົາໄປຂ້າງໜ້າຢູ່ຕະຫຼອດເວລາ ໂດຍຢ້ານຢ່າງເລິກໆວ່າເຮົາຈະຍ່າງເຂົ້າສູ່ຄຸກມືດໃຕ້ດິນ”. ແມ່ນຫຍັງຄືຄວາມຮູ້ຂອງພວກເຈົ້າກ່ຽວກັບພຣະທຳທີ່ງ່າຍດາຍເຫຼົ່ານີ້, ພວກເຈົ້າສາມາດເຂົ້າໃຈແກ່ນແທ້ຂອງພຣະທຳຂອງພຣະເຈົ້າທີ່ຢູ່ໃນຄວາມຮູ້ເຫຼົ່ານັ້ນແທ້ບໍ? ພວກເຈົ້າໄດ້ໃສ່ໃຈກັບແນວຄິດຂອງພວກເຈົ້າທີ່ພຣະເຈົ້າໄດ້ກ່າວເຖິງຢູ່ບໍ? ພວກເຈົ້າສົນໃຈຈຸດສຳຄັນນີ້ໃນແຕ່ລະມື້ບໍ? ໃນປະໂຫຍກໜຶ່ງຂອງພາກຕໍ່ໄປເຊິ່ງຕາມມາຢ່າງຕໍ່ເນື່ອງ, ພຣະເຈົ້າກ່າວວ່າ “ແຕ່ຜູ້ຄົນບໍ່ຮູ້ຈັກຄວາມປະສົງຂອງເຮົາ ແລະ ສືບຕໍ່ອະທິຖານສຳລັບສິ່ງຕ່າງໆຈາກເຮົາ, ຄືກັບວ່າສິ່ງ ທີ່ເຮົາໄດ້ປະທານໃຫ້ກັບພວກເຂົານັ້ນບໍ່ສາມາດສະໜອງຕາມເງື່ອນໄຂຂອງພວກເຂົາໄດ້, ຄືກັບວ່າອຸປະສົງມີຫຼາຍກວ່າອຸປະທານ”. ໃນປະໂຫຍກນີ້, ສາມາດເຫັນໄດ້ວ່າແນວຄິດທີ່ຢູ່ພາຍໃນພວກເຈົ້າແມ່ນຫຍັງ. ພຣະເຈົ້າບໍ່ຈື່ ຫຼື ສືບສວນໃນສິ່ງທີ່ພວກເຈົ້າເຮັດໃນອະດີດ, ສະນັ້ນ ບໍ່ຕ້ອງຄິດເຖິງເລື່ອງທີ່ຢູ່ໃນອະດີດອີກຕໍ່ໄປ. ສິ່ງທີ່ສຳຄັນໄປຫຼາຍກວ່ານັ້ນກໍຄື ພວກເຈົ້າຈະສາມາດສ້າງ “ຈິດວິນຍານຂອງເປໂຕໃນຍຸກສຸດທ້າຍ” ໃນເສັ້ນທາງແຫ່ງອະນາຄົດໄດ້ ຫຼື ບໍ່, ພວກເຈົ້າມີຄວາມເຊື່ອທີ່ຈະບັນລຸສິ່ງນີ້ໄດ້ບໍ? ສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດບໍ່ມີຫຍັງຫຼາຍໄປກວ່າການຮຽນເອົາແບບຢ່າງເປໂຕ, ໃນທີ່ສຸດ ຜູ້ຄົນອາດເດີນຕາມເສັ້ນທາງນີ້ເພື່ອນຳຄວາມອັບອາຍມາສູ່ມັງກອນແດງໃຫຍ່. ມັນເປັນຍ້ອນສິ່ງນີ້ ພຣະເຈົ້າຈຶ່ງເວົ້າວ່າ “ເຮົາຫວັງພຽງແຕ່ວ່າໃຫ້ຜູ້ຄົນມີຄວາມຕັ້ງໃຈທີ່ຈະຮ່ວມມືກັບເຮົາ. ເຮົາບໍ່ໄດ້ຮຽກຮ້ອງໃຫ້ພວກເຂົາຄົວອາຫານດີໆໃຫ້ກັບເຮົາກິນ ຫຼື ໃຫ້ພວກເຂົາຈັດກຽມບ່ອນນອນທີ່ເໝາະສົມໃຫ້ເຮົາໄດ້ວາງຫົວນອນ...” ໃນແຜ່ນດິນໂລກ, ຜູ້ຄົນຖືກຮຽກຮ້ອງໃຫ້ນຳເອົາ “ວິນຍານຂອງເລີຍ ເຟິງ” ໄປຊຸ່ມປີ 1990, ແຕ່ໃນຄົວເຮືອນຂອງພຣະເຈົ້າ, ພຣະເຈົ້າຮຽກຮ້ອງໃຫ້ພວກເຈົ້າສ້າງ “ລັກສະນະທີ່ເປັນເອກະລັກຂອງເປໂຕ”. ພວກເຈົ້າເຂົ້າໃຈຄວາມປະສົງຂອງພຣະເຈົ້າບໍ່? ພວກເຈົ້າສາມາດພະຍາຍາມເພື່ອສິ່ງນີ້ໄດ້ແທ້ບໍ່?

“ເຮົາເຄື່ອນໄຫວຢູ່ເໜືອຈັກກະວານ ແລະ ໃນຂະນະທີ່ເຮົາຍ່າງ ເຮົາກໍສັງເກດເບິ່ງຜູ້ຄົນຂອງຈັກກະວານທັງປວງ. ທ່າມກາງຝູງຊົນເທິງແຜ່ນດິນໂລກ, ບໍ່ເຄີຍມີຜູ້ໃດທີ່ເໝາະສົມສຳລັບພາລະກິດຂອງເຮົາ ຫຼື ຄົນທີ່ຮັກເຮົາຢ່າງແທ້ຈິງ. ສະນັ້ນ, ໃນຊ່ວງເວລານີ້ ເຮົາຈຶ່ງຫາຍໃຈໃຫຍ່ດ້ວຍຄວາມຜິດຫວັງ ແລະ ຜູ້ຄົນກໍພາກັນແຕກກະຈາຍໄປທົ່ວດ້ວຍທັນທີທັນໃດ, ບໍ່ຊຸມນຸມກັນອີກຕໍ່ໄປ ໂດຍຢ້ານຢູ່ເລິກໆວ່າເຮົາຈະ ‘ຈັບພວກເຂົາທັງໝົດດ້ວຍແຫອັນດຽວ’” ບາງເທື່ອ, ຄົນສ່ວນໃຫຍ່ຄົ້ນພົບວ່າພຣະທຳເຫຼົ່ານີ້ແມ່ນຍາກທີ່ຈະເຂົ້າໃຈ. ພວກເຂົາຖາມວ່າເປັນຫຍັງພຣະເຈົ້າຈຶ່ງບໍ່ຮຽກຮ້ອງຈາກມະນຸດຫຼາຍໆ, ແຕ່ກໍຫາຍໃຈໃຫຍ່ດ້ວຍຄວາມຜິດຫວັງ ຍ້ອນບໍ່ມີໃຜເໝາະສົມສຳລັບພາລະກິດຂອງພຣະອົງ. ມີຂໍ້ຂັດແຍ້ງໃນທີ່ນີ້ບໍ? ເວົ້າຕາມກົງກໍຄື ມັນມີ, ແຕ່ໃນຄວາມເປັນຈິງແມ່ນບໍ່ມີຂໍ້ຂັດແຍ້ງ. ບາງເທື່ອເຈົ້າຍັງສາມາດຈື່ໄດ້ເມື່ອພຣະເຈົ້າກ່າວວ່າ “ພຣະທຳທຸກຂໍ້ຂອງເຮົາຈະມີຜົນດັ່ງທີ່ເຮົາປາຖະໜາ”. ເມື່ອພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງ ຜູ້ຄົນກໍເອົາໃຈໃສ່ໃນທຸກການກະທຳຂອງພຣະອົງເພື່ອເບິ່ງວ່າພຣະອົງກຳລັງຈະເຮັດຫຍັງແທ້. ເມື່ອພຣະເຈົ້າປະຕິບັດພາລະກິດໃໝ່ຂອງພຣະອົງໂດຍແນໃສ່ຊາຕານໃນອານາຈັກຝ່າຍວິນຍານ, ເວົ້າອີກຢ່າງໜຶ່ງກໍຄື ເກີດມີແນວຄິດທຸກຮູບແບບທ່າມກາງຜູ້ຄົນເທິງ

ແຜ່ນດິນໂລກ ຍ້ອນພຣະເຈົ້າທີ່ຢູ່ໃນເນື້ອໜັງ. ເມື່ອພຣະເຈົ້າຫາຍໃຈໃຫຍ່ດ້ວຍຄວາມຜິດຫວັງນັ້ນກໍຄື ເມື່ອພຣະອົງເວົ້າເຖິງແນວຄິດຂອງມະນຸດທັງໝົດ, ຜູ້ຄົນກໍພະຍາຍາມຢ່າງເຕັມທີ່ເພື່ອຈັດການກັບສິ່ງເຫຼົ່ານັ້ນ ແລະ ເຖິງກັບມີຄົນທີ່ເຊື່ອວ່າ ພວກເຂົາບໍ່ມີຄວາມຫວັງແລ້ວ, ຍ້ອນພຣະເຈົ້າເວົ້າວ່າທຸກຄົນທີ່ມີແນວຄິດກ່ຽວກັບພຣະອົງແມ່ນສັດຕູຂອງພຣະອົງ ແລະ ແລ້ວຜູ້ຄົນຈະບໍ່ "ແຕກກະຈາຍ" ໄປຍ້ອນສິ່ງນີ້ໄດ້ແນວໃດ? ໂດຍສະເພາະໃນປັດຈຸບັນ, ເມື່ອການຂ້ຽນຕີມາເຖິງ, ຜູ້ຄົນກໍຍິ່ງຢ້ານຫຼາຍຂຶ້ນວ່າພຣະເຈົ້າຈະກວດລ້າງພວກເຂົາຖິ້ມ. ພວກເຂົາເຊື່ອວ່າຫຼັງຈາກທີ່ພວກເຂົາຖືກຂ້ຽນຕີ, ພຣະເຈົ້າຈະ "ຈັບພວກເຂົາທັງໝົດດ້ວຍແຫອັນດຽວ". ແຕ່ຄວາມຈິງບໍ່ແມ່ນແບບນັ້ນ: ດັ່ງທີ່ພຣະເຈົ້າເວົ້າວ່າ "ເຮົາບໍ່ປາຖະໜາທີ່ຈະ 'ກັກຂັງ' ຜູ້ຄົນທ່າມກາງການຂ້ຽນຕີຂອງເຮົາ ເພື່ອທີ່ພວກເຂົາຈະບໍ່ມີວັນສາມາດຫຼົບໜີໄດ້. ຍ້ອນການຄຸ້ມຄອງຂອງເຮົາຂາດການກະທຳຂອງມະນຸດ, ມັນຈຶ່ງເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພາລະກິດຂອງເຮົາປະສົບຜົນສຳເລັດ ແລະ ມັນເຮັດໃຫ້ພາລະກິດຂອງເຮົາດຳເນີນໄປແບບບໍ່ມີປະສິດຕິພາບ". ຄວາມປະສົງຂອງພຣະເຈົ້າບໍ່ແມ່ນເພື່ອໃຫ້ພາລະກິດຂອງພຣະອົງສິ້ນສຸດລົງທັນທີທີ່ທຸກຄົນຖືກຂ້າໃຫ້ຕາຍ, ແບບນັ້ນຈະມີປະໂຫຍດຫຍັງ? ໂດຍການປະຕິບັດພາລະກິດໃນຜູ້ຄົນ ແລະ ຂ້ຽນຕີພວກເຂົາ, ພຣະເຈົ້າໄດ້ເຮັດໃຫ້ການກະທຳຂອງພຣະອົງຊັດເຈນຜ່ານທາງພວກເຂົາ. ເພາະຜູ້ຄົນບໍ່ເຄີຍເຂົ້າໃຈວ່າໄດ້ມີການຂ້ຽນຕີໃນນໍ້າສຽງພຣະທຳຂອງພຣະເຈົ້າແລ້ວ, ພວກເຂົາຈຶ່ງບໍ່ເຄີຍມີການເຂົ້າສູ່ໃນຄວາມສຳນຶກຂອງພວກເຂົາ. ຜູ້ຄົນບໍ່ສາມາດສະແດງຄວາມເດັດດ່ຽວຂອງພວກເຂົາ ແລະ ສະນັ້ນພຣະເຈົ້າຈຶ່ງບໍ່ສາມາດເວົ້າຫຍັງໄດ້ຕໍ່ໜ້າຊາຕານ ແລະ ສິ່ງນີ້ກີດຂວາງພາລະກິດຂອງພຣະເຈົ້າບໍ່ໃຫ້ກ້າວໄປຂ້າງໜ້າ. ສະນັ້ນ ພຣະເຈົ້າເວົ້າວ່າ "ຄັ້ງໜຶ່ງເຮົາໄດ້ເຊີນມະນຸດມາເຮືອນຂອງເຮົາໃນຖານະແຂກແຕ່ເຂົາແລ່ນໄປບ່ອນນັ້ນ ແລະ ບ່ອນນີ້ຍ້ອນການຮຽກເອີ້ນຂອງເຮົາ ຄືກັບວ່າ ແທນທີ່ຈະເຊີນເຂົາໃນຖານະເປັນແຂກ ເຮົາໄດ້ນຳເອົາເຂົາໄປສູ່ເດີ່ນປະຫານ. ສະນັ້ນ, ເຮືອນຂອງເຮົາຈຶ່ງຖືກປະໃຫ້ເປົ່າວ່າງເນື່ອງຈາກມະນຸດຫຼີກເວັ້ນເຮົາຕະຫຼອດ ແລະ ໄດ້ລະແວງເຮົາຢູ່ສະເໝີ. ສິ່ງນີ້ເຮັດໃຫ້ເຮົາບໍ່ມີຫົນທາງປະຕິບັດພາກສ່ວນຂອງພາລະກິດຂອງເຮົາ". ມັນເປັນຍ້ອນຄວາມຜິດພາດຂອງມະນຸດທີ່ພຣະເຈົ້າໄດ້ວາງເງື່ອນໄຂຂອງພຣະອົງໃຫ້ກັບມະນຸດ. ມັນເປັນຍ້ອນຜູ້ຄົນລົ້ມເຫຼວທີ່ຈະເຮັດໃຫ້ຂັ້ນຕອນນີ້ຂອງພາລະກິດສຳເລັດ, ພຣະເຈົ້າຈຶ່ງເພີ່ມຖ້ອຍຄຳຕື່ມອີກ ເຊິ່ງນີ້ເປັນຖ້ອຍຄຳທີ່ວ່າ "ອີກສ່ວນໜຶ່ງຂອງພາລະກິດໃນມະນຸດ" ທີ່ພຣະເຈົ້າກ່າວເຖິງ. ແຕ່ເຮົາຈະບໍ່ເວົ້າຍາວກ່ຽວກັບ "ການຈັບພວກເຂົາທັງໝົດດ້ວຍແຫອັນດຽວ" ທີ່ພຣະເຈົ້າກ່າວເຖິງ ຍ້ອນວ່າສິ່ງນີ້ບໍ່ມີບົດບາດຫຍັງເລີຍຕໍ່ພາລະກິດໃນປັດຈຸບັນ. ໂດຍທຳມະຊາດແລ້ວ, ໃນ "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ", ພຣະທຳຫຼາຍຂໍ້ຂອງພຣະອົງຈັດການກັບມະນຸດ, ແຕ່ຜູ້ຄົນຕ້ອງເຂົ້າໃຈຄວາມປະສົງຂອງພຣະເຈົ້າ; ບໍ່ວ່າພຣະອົງຈະເວົ້າຫຍັງກໍຕາມ, ເຈດຕະນາຂອງພຣະອົງແມ່ນດີຢູ່ສະເໝີ. ສາມາດເວົ້າໄດ້ວ່າ ຍ້ອນວິທີທາງທີ່ພຣະເຈົ້າກ່າວແມ່ນມີຫຼາກຫຼາຍວິທີ, ຜູ້ຄົນຈຶ່ງບໍ່ໝັ້ນໃຈຮ້ອຍເປີເຊັນກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ເຊື່ອວ່າພຣະທຳສ່ວນໃຫຍ່ຂອງພຣະເຈົ້າແມ່ນຖືກກ່າວຍ້ອນຄວາມຈຳເປັນຂອງພາລະກິດຂອງພຣະອົງ ແລະ ປະກອບມີສ່ວນເລັກນ້ອຍທີ່ເປັນຈິງ. ນີ້ເຮັດໃຫ້ພວກເຂົາສັບສົນ ແລະ ຄິດໜັກຍ້ອນຄວາມຄິດ

ຂອງພວກເຂົາ, ຍ້ອນວ່າ ໃນແນວຄິດຂອງພວກເຂົານັ້ນ ພຣະເຈົ້າແມ່ນມີສະຕິປັນຍາຫຼາຍ ແລະ, ດ້ວຍເຫດນັ້ນກໍຢູ່ເໜືອການຢັ່ງເຖິງຂອງພວກເຂົາແທ້ໆ, ມັນເປັນຄືກັບວ່າ ພວກເຂົາບໍ່ຮູ້ຈັກຫຍັງເລີຍ ແລະ ບໍ່ມີຄວາມຮູ້ໃດເລີຍກ່ຽວກັບວິທີກິນພຣະທຳຂອງພຣະເຈົ້າ. ຜູ້ຄົນເຮັດໃຫ້ພຣະທຳຂອງພຣະເຈົ້າເປັນນາມມະທຳ ແລະ ຊັບຊ້ອນ, ດັ່ງທີ່ພຣະເຈົ້າເວົ້າວ່າ "ຜູ້ຄົນປາຖະໜາທີ່ຈະເພີ່ມລົດຊາດໃສ່ໃນຖ້ອຍຄຳຂອງເຮົາຢູ່ສະເໝີ". ຍ້ອນແນວຄວາມຄິດຂອງພວກເຂົາສັບສົນເກີນໄປ ແລະ ພຣະເຈົ້າ "ເກືອບບໍ່ສາມາດບັນລຸໄດ້", ສ່ວນໜຶ່ງຂອງພຣະທຳຂອງພຣະເຈົ້າຈຶ່ງຖືກມະນຸດຈຳກັດໄວ້, ປ່ອຍໃຫ້ພຣະອົງບໍ່ມີທາງເລືອກ ນອກຈາກກ່າວໃນລັກສະນະກົງໄປກົງມາ. ເພາະການຮຽກຮ້ອງຈາກຜູ້ຄົນ "ສູງເກີນໄປ" ແລະ ຍ້ອນຈິນຕະນາການຂອງພວກເຂົາອຸດົມສົມບູນເກີນໄປ, ຄືກັບວ່າ ພວກເຂົາສາມາດຂ້າມສູ່ອານາຈັກຝ່າຍວິນຍານເພື່ອເບິ່ງການກະທຳຂອງຊາຕານໄດ້, ສິ່ງນີ້ໄດ້ຫຼຸດຜ່ອນພຣະທຳຂອງພຣະເຈົ້າ, ຍ້ອນຍິ່ງພຣະເຈົ້າເວົ້າຫຼາຍສໍ່າໃດ, ໜ້າຂອງຜູ້ຄົນກໍຍິ່ງເປັນທຸກຫຼາຍສໍ່ານັ້ນ. ເປັນຫຍັງພວກເຂົາຈຶ່ງບໍ່ເຊື່ອຟັງໂດຍງ່າຍດາຍ, ແທນທີ່ຈະຕຶກຕອງເຖິງຕອນຈົບຂອງພວກເຂົາ? ຜົນປະໂຫຍດໃນສິ່ງນີ້ມີຢູ່ໃສ?

# ບົດທີ 33

ໃນຄວາມຈິງແລ້ວ ໂດຍອີງຕາມສິ່ງທີ່ພຣະເຈົ້າໄດ້ປະຕິບັດໃນຜູ້ຄົນ ແລະ ໃນສິ່ງທີ່ພຣະອົງມີໄດ້ມອບໃຫ້ພວກເຂົາ ພ້ອມກັບສິ່ງທີ່ຜູ້ຄົນມີ ແມ່ນສາມາດເວົ້າໄດ້ວ່າ ຄວາມຕ້ອງການຂອງພຣະອົງຈາກຜູ້ຄົນແມ່ນບໍ່ໄດ້ມີຫຼາຍ ເຊິ່ງພຣະອົງບໍ່ໄດ້ຂໍຫຍັງຫຼາຍຈາກພວກເຂົາ. ແລ້ວພວກເຂົາຈະບໍ່ສາມາດພະຍາຍາມເຮັດໃຫ້ພຣະເຈົ້າພໍໃຈໄດ້ແນວໃດ? ພຣະເຈົ້າມອບຮ້ອຍເປີເຊັນໃຫ້ແກ່ມະນຸດ ແຕ່ພຣະອົງພຽງແຕ່ຕ້ອງຜູ້ຄົນໃນສ່ວນເປີເຊັນນ້ອຍໆ. ນີ້ແມ່ນການຂໍຫຼາຍເກີນໄປບໍ? ພຣະເຈົ້າກຳລັງສ້າງເລື່ອງທີ່ບໍ່ເປັນເລື່ອງບໍ? ຜູ້ຄົນບໍ່ຮູ້ຈັກຕົວເອງ, ພວກເຂົາບໍ່ຄ່ອຍກວດສອບຕົວເອງເມື່ອຢູ່ຕໍ່ໜ້າພຣະເຈົ້າ ແລະ ສະນັ້ນ ຈຶ່ງມີໄລຍະທີ່ພວກເຂົາຕິດແຮ້ວເປັນປະຈຳ ເມື່ອເປັນເຊັ່ນນັ້ນແລ້ວຈະສາມາດຖືເອົາສິ່ງນີ້ເປັນການຮ່ວມມືກັບພຣະເຈົ້າໄດ້ແນວໃດ? ຖ້າເວລາໃດໜຶ່ງທີ່ພຣະເຈົ້າບໍ່ໄດ້ມອບພາລະທີ່ໜັກໜ່ວງໃຫ້ແກ່ຜູ້ຄົນ, ພວກເຂົາກໍຈະແຕກພັງທະລາຍລົງຄືກັບຂີ້ດິນ ແລະ ຈະບໍ່ມີຄວາມພະຍາຍາມດ້ວຍຕົວເອງເພື່ອຊອກຫາແນວເຮັດ. ບໍ່ວ່າ ຈະໃນທາງບວກ ຫຼື ທາງລົບ ຜູ້ຄົນແມ່ນເປັນແບບນັ້ນ, ບໍ່ສາມາດຮ່ວມມືກັບພຣະເຈົ້າຢ່າງຫ້າວຫັນ ແລະ ຊອກຫາເຫດຜົນທາງລົບຕະຫຼອດເພື່ອຍອມຈຳນົນກັບຕົວເອງ. ເຈົ້າແມ່ນຄົນທີ່ເຮັດທຸກຢ່າງ ທີ່ບໍ່ແມ່ນເພື່ອຕົວເອງ ແຕ່ເພື່ອເຮັດໃຫ້ພຣະເຈົ້າພໍໃຈຢ່າງແທ້ຈິງບໍ? ເຈົ້າແມ່ນຄົນທີ່ບໍ່ອີງໃສ່ອາລົມ, ຜູ້ທີ່ບໍ່ມີຄວາມຕ້ອງການສ່ວນຕົວ ແລະ ຜູ້ທີ່ປະຕິບັດຕາມຄວາມຕ້ອງການຂອງພາລະກິດຂອງພຣະເຈົ້າຢ່າງແທ້ຈິງບໍ? "ເປັນຫຍັງຜູ້ຄົນຈຶ່ງພະຍາຍາມຕໍ່ລອງກັບເຮົາຕະຫຼອດເວລາ? ເຮົາແມ່ນຜູ້ຈັດການທົ່ວໄປຂອງສູນການຄ້າບໍ? ເປັນຫຍັງເຮົາຈຶ່ງຕ້ອງເຮັດສິ່ງທີ່ຜູ້ຄົນຕ້ອງການໃຫ້ສຳເລັດຢ່າງພໍໃຈ ແຕ່ສິ່ງທີ່ເຮົາຂໍຈາກມະນຸດແມ່ນບໍ່ມີຜົນຫຍັງ?" ເປັນຫຍັງພຣະເຈົ້າຈຶ່ງຂໍສິ່ງດັ່ງກ່າວຫຼາຍຄັ້ງຢ່າງຕໍ່ເນື່ອງ? ເປັນຫຍັງພຣະອົງຈຶ່ງຮ້ອງໄຫ້ດ້ວຍຄວາມທໍ້ໃຈ? ພຣະເຈົ້າບໍ່ໄດ້ຮັບຫຍັງໃນຜູ້ຄົນ, ສິ່ງດຽວທີ່ພຣະອົງເຫັນແມ່ນພາລະກິດທີ່ພວກເຂົາຄັດເລືອກເອງ. ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ "ແຕ່ສິ່ງທີ່ເຮົາຂໍຈາກມະນຸດແມ່ນບໍ່ມີຜົນຫຍັງ"? ຖາມຕົວພວກເຈົ້າເອງເບິ່ງວ່າ: ນັບແຕ່ຕົ້ນຈົນຈົບ ແມ່ນໃຜສາມາດເຮັດພາລະກິດ ທີ່ເປັນໜ້າທີ່ຂອງພວກເຂົາ ເຊິ່ງເປັນພາລະກິດທີ່ພວກເຂົາບໍ່ມີທາງເລືອກ? ເປັນຫຍັງຄືບໍ່ເຮັດດ້ວຍຄວາມຮູ້ສຶກທີ່ຢູ່ພາຍໃນໃຈຂອງພວກເຂົາ? ຜູ້ຄົນໃຫ້ອິດສະຫຼະແກ່ບຸກຄະລິກກະພາບຂອງຕົວເອງ ໂດຍບໍ່ເຄີຍພະຍາຍາມໃນສິ່ງທີ່ພວກເຂົາເຮັດ ຄືກັບວ່າ ກຳລັງຕຶກປາເປັນເວລາ 3 ມື້ ແລະ ຖິ້ມແຫຂອງພວກເຂົາໄວ້ ແລະ ໃຊ້ເວລາອີກ 2 ມື້ຕໍ່ໄປໂດຍທີ່ບໍ່ເຮັດຫຍັງ. ພວກເຂົາທັງຮ້ອນ ແລະ ເຢັນ: ເມື່ອພວກເຂົາຮ້ອນ ພວກເຂົາສາມາດເຜົາທຸກສິ່ງຢູ່ເທິງແຜ່ນດິນໂລກ ແລະ ເມື່ອພວກເຂົາເຢັນ ພວກເຂົາສາມາດເຮັດໃຫ້ນໍ້າທັງໝົດຢູ່ເທິງແຜ່ນດິນໂລກແຂງກະດ້າງໄດ້. ນີ້ບໍ່ແມ່ນພາລະໜ້າທີ່ຂອງມະນຸດ ແຕ່ນີ້ແມ່ນການປຽບທຽບທີ່ເໝາະສົມທີ່ສຸດກ່ຽວກັບສະພາບຂອງມະນຸດ. ນີ້ບໍ່ແມ່ນຄວາມຈິງບໍ? ບາງເທື່ອເຮົາມີ "ແນວຄິດ" ກ່ຽວກັບຜູ້ຄົນ, ບາງເທື່ອເຮົາກໍປະນາມພວກເຂົາ ແຕ່ຢ່າງໃດກໍຕາມ "ດ້ວຍຄວາມຈິງ ເຈົ້າຈະໄປໄດ້ທົ່ວໂລກ; ປາສະຈາກຄວາມຈິງ ເຈົ້າກໍຈະໄປໃສບໍ່ໄດ້". ເຖິງວ່ານີ້ແມ່ນສຸພາສິດສັ້ນໆຂອງມະນຸດ ເຮົາກໍຄິດວ່າ ມັນເໝາະສົມທີ່ຈະໃຊ້ຢູ່ນີ້. ເຮົາບໍ່ໄດ້ຈົງໃຈເຮັດໃຫ້

ຈິດວິນຍານຜູ້ຄົນທົດທູ່ ແລະ ປະຕິເສດການກະທຳຂອງພວກເຂົາ. ຂໍໃຫ້ເຮົາໄດ້ປຶກສາກັບພວກເຈົ້າກ່ຽວກັບບາງຄຳຖາມ: ມີໃຜເຫັນພາລະກິດຂອງພຣະເຈົ້າເປັນພາລະກິດໃນໜ້າທີ່ຂອງພວກເຂົາເອງແດ່? ມີໃຜສາມາດເວົ້າວ່າ "ຕາບໃດທີ່ຂ້ານ້ອຍສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້ ຂ້ານ້ອຍກໍຈະເຮັດສຸດຄວາມສາມາດຂອງຂ້ານ້ອຍ"? ມີໃຜສາມາດເວົ້າວ່າ "ບໍ່ວ່າ ຄົນອື່ນຈະເປັນແນວໃດກໍຕາມ ຂ້ານ້ອຍຈະເຮັດທຸກຢ່າງທີ່ພຣະເຈົ້າຕ້ອງການ ແລະ ບໍ່ວ່າ ໄລຍະເວລາຂອງພາລະກິດຂອງພຣະເຈົ້າຈະດົນ ຫຼື ສັ້ນກໍຕາມ ຂ້ານ້ອຍກໍຈະເຮັດໜ້າທີ່ຂອງຂ້ານ້ອຍໃຫ້ສຳເລັດ; ການເຮັດໃຫ້ພາລະກິດຂອງພຣະອົງສິ້ນສຸດແມ່ນໜ້າທີ່ຂອງພຣະອົງ ແລະ ມັນບໍ່ແມ່ນສິ່ງທີ່ຂ້ານ້ອຍຄິດໄຕ່ຕອງ"? ມີໃຜສາມາດມີຄວາມຮູ້ດັ່ງກ່າວ? ມັນບໍ່ສຳຄັນວ່າ ພວກເຈົ້າຈະຄິດແນວໃດ. ບາງເທື່ອເຈົ້າອາດຈະມີການຢັ່ງຮູ້ຢ່າງສູງ ເຊິ່ງໃນກໍລະນີນີ້ ເຮົາກໍຂໍຍອມ, ເຮົາຍອມຮັບຄວາມປະລາໄຊ ແຕ່ເຮົາຕ້ອງບອກພວກເຈົ້າວ່າ ສິ່ງທີ່ພຣະເຈົ້າຕ້ອງການແມ່ນຈິດໃຈທີ່ຈົງຮັກພັກດີ, ຈິດໃຈທີ່ຈິງໃຈ ແລະ ມີຄວາມກະຕືລືລົ້ນ ແລະ ບໍ່ແມ່ນຈິດໃຈຂອງໝາປ່າທີ່ເນລະຄຸນ. ພວກເຈົ້າຮູ້ຫຍັງກ່ຽວກັບ "ການຕໍ່ລອງ" ນີ້ບໍ່? ນັບແຕ່ຕົ້ນຈົນຈົບ ພວກເຈົ້າໄດ້ "ເດີນທາງໄປທົ່ວໂລກ". ບຶດໜຶ່ງພວກເຈົ້າໄປຢູ່ເມືອງ "ກຸນໝິງ" ກັບນໍ້າພຸທີ່ໄຫຼຢູ່ຕະຫຼອດເວລາ ແລະ ໃນກະພິບຕາ ພວກເຈົ້າກໍໄປຮອດ "ຂົ້ວໂລກໃຕ້" ທີ່ໜາວຈັດ ແລະ ປົກຄຸມໄປດ້ວຍຫິມະ. ແມ່ນໃຜບໍ່ເຄີຍທໍລະຍົດຕໍ່ຕົນເອງແດ່? ສິ່ງທີ່ພຣະເຈົ້າຂໍແມ່ນຈິດໃຈທີ່ "ບໍ່ຢຸດພັກຈົນເຖິງຄວາມຕາຍ", ສິ່ງທີ່ພຣະອົງຕ້ອງການແມ່ນຈິດວິນຍານທີ່ຜູ້ຄົນ "ບໍ່ຫວນກັບຄືນຈົນກວ່າພວກເຂົາຈະຕຳກຳແພງທາງໃຕ້". ໂດຍທຳມະຊາດແລ້ວ ພຣະເຈົ້າບໍ່ໄດ້ມີເຈດຕະນາໃຫ້ຜູ້ຄົນຍ່າງໃນເສັ້ນທາງທີ່ຜິດ ແຕ່ໃຫ້ຮັບເອົາຈິດໃຈດັ່ງກ່າວ. ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ "ເມື່ອເຮົາສົມທຽບ 'ຂອງຂວັນ' ທີ່ພວກເຂົາໄດ້ມອບໃຫ້ ກັບສິ່ງຕ່າງໆຂອງເຮົາ, ຜູ້ຄົນກໍຮູ້ເຖິງຄວາມມີຄ່າຂອງເຮົາທັນທີ ແລະ ຫຼັງຈາກນັ້ນ ພວກເຂົາຈຶ່ງເຫັນຄວາມບໍ່ມີຂອບເຂດຈຳກັດຂອງເຮົາ". ພຣະທຳເຫຼົ່ານີ້ສາມາດຖືກນຳມາອະທິບາຍໄດ້ແນວໃດ? ບາງເທື່ອການອ່ານພຣະທຳຂ້າງເທິງອາດມອບຄວາມຮູ້ບາງຢ່າງໃຫ້ກັບເຈົ້າ ເນື່ອງຈາກວ່າ ພຣະເຈົ້າເອົາຫົວໃຈທັງໝົດຂອງມະນຸດອອກມາເພື່ອວິເຄາະຢ່າງລະອຽດໃນເວລາທີ່ຜູ້ຄົນຮູ້ຈັກພຣະທຳເຫຼົ່ານີ້. ແຕ່ຍ້ອນຄວາມໝາຍພາຍໃນທີ່ເລິກເຊິ່ງຂອງພຣະທຳຂອງພຣະເຈົ້າ ຜູ້ຄົນຈຶ່ງຍັງບໍ່ມີຄວາມຊັດເຈນກ່ຽວກັບເນື້ອໜັງເກົ່າ ເນື່ອງຈາກວ່າ ພວກເຂົາບໍ່ໄດ້ສຶກສາຢູ່ມະຫາວິທະຍາໄລແພດສາດ ແລະ ພວກເຂົາບໍ່ແມ່ນນັກບູຮານຄະດີ ແລະ ສະນັ້ນ ພວກເຂົາຈຶ່ງຮູ້ສຶກວ່າ ຄຳສັບໃໝ່ແມ່ນເປັນສິ່ງທີ່ບໍ່ສາມາດຈະເຂົ້າໃຈໄດ້ ແລະ ພຽງຫຼັງຈາກນັ້ນ ພວກເຂົາຈຶ່ງໄດ້ຍິນຍອມເລັກນ້ອຍ. ເນື່ອງຈາກວ່າ ຜູ້ຄົນບໍ່ມີພະລັງເມື່ອຢູ່ຕໍ່ໜ້າເນື້ອໜັງເກົ່າ; ເຖິງແມ່ນວ່າ ມັນຈະບໍ່ຄ້າຍຄືກັບສັດຮ້າຍ ຫຼື ບໍ່ສາມາດທຳລາຍລ້າງມະນຸດຊາດຄືກັບລະເບີດປະລະມານູ ພວກເຂົາກໍບໍ່ຮູ້ວ່າຈະຈັດການກັບມັນຢ່າງໃດດີ ແລະ ມັນຄືກັບວ່າພວກເຂົາບໍ່ມີພະລັງ. ແຕ່ສຳລັບເຮົາແລ້ວ ແມ່ນມີວິທີໃນການຈັດການກັບເນື້ອໜັງເກົ່າໄດ້. ການທີ່ມະນຸດບໍ່ເຄີຍພະຍາຍາມຄິດກ່ຽວກັບວິທີການຕອບໂຕ້ ແມ່ນໄດ້ນຳໄປສູ່ພຶດຕິກຳຜິດປົກກະຕິຂອງມະນຸດທີ່ມັນແນບເຫຼື້ອມຢ່າງຕໍ່ເນື່ອງຢູ່ຕໍ່ໜ້າສາຍຕາຂອງເຮົາ; ດັ່ງທີ່ພຣະເຈົ້າໄດ້ກ່າວວ່າ: "ໃນເວລາທີ່ເຮົາສະແດງຄວາມສົມບູນຂອງເຮົາໃຫ້ແກ່ພວກເຂົາ, ພວກເຂົາກໍເບິ່ງເຮົາດ້ວຍຕາທີ່ເປີດກວ້າງ, ຢືນຢູ່ຕໍ່

ໜ້າເຮົາແບບບໍ່ເໜັງຕີງ ຄືກັບເສົາຫີນເກືອ. ເມື່ອເຮົາເຫັນຄວາມແປກປະຫຼາດຂອງພວກເຂົາ ເຮົາຈຶ່ງເກືອບບໍ່ສາມາດຢຸດຕົວເອງຈາກການຫົວຂວັນ. ຍ້ອນພວກເຂົາກຳລັງພະຍາຍາມຂໍສິ່ງຕ່າງໆຈາກເຮົາ, ເຮົາຈຶ່ງມອບສິ່ງຕ່າງໆທີ່ຢູ່ໃນມືຂອງເຮົາໃຫ້ແກ່ພວກເຂົາ ແລະ ພວກເຂົາກໍອູ້ມເອົາສິ່ງເຫຼົ່ານັ້ນໃສ່ເອິກຂອງພວກເຂົາ ຖະໜຸຖະໜອມສິ່ງເຫຼົ່ານັ້ນຄືກັບເດັກເກີດໃໝ່, ນັ້ນຄືສິ່ງທີ່ພວກເຂົາເຮັດ ແຕ່ເຮັດພຽງໃນຊ່ວງໄລຍະໜຶ່ງ". ສິ່ງເຫຼົ່ານີ້ບໍ່ແມ່ນການກະທຳຂອງເນື້ອໜັງເກົ່າບໍ? ໃນປັດຈຸບັນ ໃນເມື່ອຜູ້ຄົນໄດ້ເຂົ້າໃຈ ແລ້ວເປັນຫຍັງພວກເຂົາແທນທີ່ຈະປະຖິ້ມ ແຕ່ຊໍ້າພັດຍັງຄົງສືບຕໍ່ຢູ່? ທີ່ຈິງແລ້ວ ສ່ວນໜຶ່ງຂອງຄວາມຕ້ອງການຂອງພຣະເຈົ້າ ແມ່ນສາມາດບັນລຸໄດ້ໂດຍມະນຸດ ແຕ່ຜູ້ຄົນບໍ່ສົນໃຈມັນ ເນື່ອງຈາກ "ເຮົາບໍ່ໄດ້ຂ້ຽນຕີມະນຸດແບບເບົາໆ. ມັນເປັນເພາະເຫດຜົນນີ້ ຜູ້ຄົນຈຶ່ງໃຫ້ອິດສະຫຼະແກ່ເນື້ອໜັງຂອງພວກເຂົາຕະຫຼອດເວລາ. ພວກເຂົາບໍ່ສັງເກດເບິ່ງຄວາມປະສົງຂອງເຮົາ ແຕ່ໄດ້ລໍ້ລວງເຮົາຢູ່ຕໍ່ໜ້າບັນລັງພິພາກສາຂອງເຮົາ". ນີ້ບໍ່ແມ່ນຄຸນວຸດທິຂອງມະນຸດບໍ? ບໍ່ແມ່ນວ່າ ພຣະເຈົ້າຈົງໃຈຈັບຜິດໄປໝົດທຸກຢ່າງ ແຕ່ນີ້ແມ່ນຄວາມເປັນຈິງ. ພຣະເຈົ້າຕ້ອງໄດ້ອະທິບາຍສິ່ງນີ້ບໍ? ດັ່ງທີ່ພຣະເຈົ້າໄດ້ກ່າວວ່າ "ມັນເປັນເພາະວ່າ 'ຄວາມເຊື່ອ' ຂອງຜູ້ຄົນແມ່ນຍິ່ງໃຫຍ່ຫຼາຍ ຈົນພວກເຂົາ 'ເປັນຕານັບຖື'". ຍ້ອນເຫດຜົນນີ້ ເຮົາຈຶ່ງເຮັດຕາມການຈັດແຈງຂອງພຣະເຈົ້າ ແລະ ດ້ວຍເຫດນີ້ ເຮົາຈຶ່ງບໍ່ເວົ້າໃນສິ່ງນີ້ຫຼາຍ; ຍ້ອນ "ຄວາມເຊື່ອ" ຂອງຜູ້ຄົນ ເຮົາຈຶ່ງຄວ້າເອົາສິ່ງນີ້ ແລ້ວນຳໃຊ້ຄວາມເຊື່ອຂອງພວກເຂົາ ເພື່ອເຮັດໃຫ້ພວກເຂົາປະຕິບັດພາລະໜ້າທີ່ຂອງພວກເຂົາ ໂດຍບໍ່ຕ້ອງໃຫ້ເຮົາເຕືອນພວກເຂົາ. ການເຮັດສິ່ງນີ້ຜິດບໍ? ນີ້ບໍ່ແມ່ນສິ່ງທີ່ພຣະເຈົ້າຕ້ອງການຢ່າງແນ່ນອນບໍ? ບາງເທື່ອ ເມື່ອໄດ້ຍິນພຣະທຳດັ່ງກ່າວ ບາງຄົນອາດຮູ້ສຶກເບື່ອ. ສະນັ້ນ ເຮົາຈະເວົ້າສິ່ງອື່ນແທນ ເພື່ອອະນຸໂລມໃຫ້ກັບພວກເຂົາ. ເມື່ອທຸກຄົນທີ່ຖືກພຣະເຈົ້າເລືອກທົ່ວຈັກກະວານໄດ້ຜ່ານການຂ້ຽນຕີ ແລະ ເມື່ອສະພາບພາຍໃນມະນຸດຖືກແກ້ໄຂ ຜູ້ຄົນຈະດີໃຈຢ່າງລັບໆຢູ່ໃນໃຈຂອງພວກເຂົາ ຄືກັບວ່າ ພວກເຂົາໄດ້ໜີພົ້ນຈາກຄວາມລຳບາກຍາກແຄ້ນ. ໃນຂະນະນີ້ ຜູ້ຄົນຈະບໍ່ເລືອກເພື່ອຕົວເອງອີກຕໍ່ໄປ ຍ້ອນວ່າ ນີ້ແມ່ນຜົນສຳເລັດຢ່າງແນ່ນອນໃນລະຫວ່າງການປະຕິບັດພາລະກິດສຸດທ້າຍຂອງພຣະເຈົ້າ. ເມື່ອບາດກ້າວຂອງພຣະອົງໄດ້ກ້າວເຂົ້າສູ່ປັດຈຸບັນ ບຸດຊາຍ ແລະ ປະຊາຊົນຂອງພຣະເຈົ້າທຸກຄົນກໍຈະເຂົ້າສູ່ການຂ້ຽນຕີ ແລະ ຊາວອິດສະຣາເອນກໍຈະບໍ່ສາມາດໜີພົ້ນຈາກໄລຍະນີ້ເຊັ່ນກັນ ເນື່ອງຈາກວ່າ ຜູ້ຄົນແມ່ນມີຄວາມບໍ່ບໍລິສຸດຢູ່ພາຍໃນພວກເຂົາ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງນຳພາທຸກຄົນເຂົ້າສູ່ເຕົາຫຼໍ່ທີ່ຍິ່ງໃຫຍ່ ເພື່ອຫຼໍ່ຫຼອມໃຫ້ບໍລິສຸດເຊິ່ງມັນເປັນເສັ້ນທາງທີ່ຈຳເປັນ. ເມື່ອສິ່ງນີ້ໄດ້ຜ່ານພົ້ນໄປ ຜູ້ຄົນຈະຟື້ນຄືນຈາກຄວາມຕາຍ ເຊິ່ງກໍແມ່ນສິ່ງທີ່ພຣະເຈົ້າໄດ້ບອກລ່ວງໜ້າຢ່າງແນ່ນອນໃນ "ພຣະວັດຈະນະແຫ່ງພຣະວິນຍານທັງເຈັດ". ເພື່ອບໍ່ໃຫ້ກາຍເປັນສັດຕູກັບຜູ້ຄົນ ເຮົາຈະບໍ່ເວົ້າກ່ຽວກັບສິ່ງນີ້ອີກ. ຍ້ອນວ່າ ພາລະກິດຂອງພຣະເຈົ້າມະຫັດສະຈັນການທຳນາຍທີ່ກ່າວຈາກປາກຂອງພຣະເຈົ້າກໍຈະເກີດເປັນຈິງໃນທີ່ສຸດ; ເມື່ອພຣະເຈົ້າຂໍໃຫ້ຜູ້ຄົນເວົ້າກ່ຽວກັບແນວຄິດຂອງພວກເຂົາອີກຄັ້ງ ພວກເຂົາກໍຕົກຕະລຶງຈົນປາກບໍ່ອອກ ແລະ ສະນັ້ນ ທຸກຄົນບໍ່ຄວນກັງວົນ ແລະ ກະວົນກະວາຍ. ດັ່ງທີ່ເຮົາໄດ້ກ່າວວ່າ "ຈາກພາລະກິດທັງໝົດຂອງເຮົາ ເຄີຍມີບາດກ້າວໃດບໍ ທີ່ຖືກປະຕິບັດດ້ວຍມືຂອງມະນຸດ?" ເຈົ້າເຂົ້າໃຈແກ່ນແທ້ຂອງພຣະທຳເຫຼົ່ານີ້ບໍ?

# ບົດທີ 35

ໃນປັດຈຸບັນ ມະນຸດທຸກຄົນໄດ້ເຂົ້າສູ່ການຂ້ຽນຕີໃນລະດັບທີ່ແຕກຕ່າງກັນ. ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ: "ເຮົາຍ່າງຄຽງຂ້າງກັບມະນຸດ". ສິ່ງນີ້ແມ່ນຄວາມຈິງຢ່າງແນ່ນອນ ແຕ່ຜູ້ຄົນກໍຍັງບໍ່ສາມາດເຂົ້າໃຈຈຸດນີ້ຢ່າງຄົບຖ້ວນ. ດ້ວຍເຫດນັ້ນ ພາລະກິດໃນສ່ວນທີ່ພວກເຂົາໄດ້ເຮັດຈຶ່ງບໍ່ມີຄວາມຈຳເປັນ. ພຣະເຈົ້າໄດ້ກ່າວໄວ້ວ່າ: "ເຮົາສະໜັບສະໜູນ ແລະ ສະໜອງໃຫ້ພວກເຂົາຕາມວຸດທິພາວະຂອງພວກເຂົາ. ຍ້ອນມະນຸດແມ່ນຕົວລະຄອນຫຼັກຂອງແຜນການຄຸ້ມຄອງທັງໝົດຂອງເຮົາ, ເຮົາຈຶ່ງມອບການຊີ້ນຳຫຼາຍຂຶ້ນໃຫ້ແກ່ຜູ້ທີ່ຖືກກຳນົດໃຫ້ມີບົດບາດເປັນ 'ມະນຸດ' ເພື່ອວ່າພວກເຂົາຈະສາມາດຫຼິ້ນບົດບາດນັ້ນຢ່າງຈິງໃຈ ແລະ ຢ່າງສຸດຄວາມສາມາດຂອງພວກເຂົາ" ເຊັ່ນດຽວກັນກັບ "... ຢ່າງໃດກໍຕາມ ເຮົາປະຕິເສດທີ່ຈະວິຈານສາມັນສຳນຶກຂອງພວກເຂົາໂດຍກົງ; ກົງກັນຂ້າມ, ເຮົາສືບຕໍ່ນຳພາພວກເຂົາຢ່າງອົດທົນ ແລະ ເປັນລະບົບ. ບໍ່ວ່າຢ່າງໃດກໍຕາມ, ມະນຸດແມ່ນອ່ອນແອ ແລະ ບໍ່ສາມາດເຮັດພາລະກິດໃດໄດ້ເລີຍ". ຄວາມຄິດຂອງພຣະເຈົ້າຄື: ເຖິງແມ່ນວ່າໃນທີ່ສຸດແລ້ວ ພຣະອົງຈະກຳຈັດມະນຸດເຫຼົ່ານີ້ທຸກຄົນ ແຕ່ພາລະກິດຂອງພຣະອົງຢູ່ແຜ່ນດິນໂລກຈະຍັງສືບຕໍ່ໄປຕາມແຜນດັ່ງເດີມຂອງພຣະອົງ. ພຣະເຈົ້າບໍ່ປະຕິບັດພາລະກິດທີ່ບໍ່ມີປະໂຫຍດ; ທຸກສິ່ງທີ່ພຣະເຈົ້າປະຕິບັດແມ່ນສິ່ງທີ່ດີ. ດັ່ງທີ່ເປໂຕໄດ້ກ່າວໄວ້ວ່າ: "ເຖິງແມ່ນວ່າພຣະເຈົ້າຈະຫຼິ້ນກັບມະນຸດຄືກັບວ່າ ພວກເຂົາແມ່ນຂອງຫຼິ້ນ ແຕ່ມະນຸດຈະຈົ່ມວ່າຫຍັງໄດ້? ພວກເຂົາຈະມີສິດຫຍັງ?" ໃນປັດຈຸບັນ ນີ້ບໍ່ແມ່ນສິ່ງທີ່ພຣະເຈົ້າກຳລັງບັນລຸກັບມວນມະນຸດບໍ? ມະນຸດສາມາດມີທັດສະນະດັ່ງກ່າວໄດ້ແທ້ບໍ? ເປັນຫຍັງເປໂຕ ທີ່ມີຊີວິດເມື່ອຫຼາຍພັນປີກ່ອນ ສາມາດເວົ້າສິ່ງດັ່ງກ່າວໄດ້ ໃນຂະນະທີ່ "ເປໂຕ" ໃນປັດຈຸບັນຜູ້ທີ່ດຳລົງຊີວິດຢູ່ໃນຍຸກທັນສະໄໝ ແລະ ເທັກໂນໂລຊີທີ່ທັນສະໄໝນີ້ບໍ່ສາມາດເຮັດໄດ້? ເຮົາບໍ່ສາມາດກ່າວຢ່າງໝັ້ນໃຈວ່າ ປະຫວັດສາດກຳລັງເດີນໜ້າ ຫຼື ຖອຍຫຼັງ ແລະ ບໍ່ມີໃຜສາມາດຕອບຄຳຖາມວ່າ ວິທະຍາສາດກຳລັງເຄື່ອນໄປທາງໜ້າ ຫຼື ຖອຍຫຼັງ. ທຸກສິ່ງທີ່ພຣະເຈົ້າປະຕິບັດໃນມະນຸດແມ່ນມີເຈດຕະນາເຮັດໃຫ້ພວກເຂົາເປັນຄົນດີ ແລະ ເຮັດໃຫ້ຊີວິດຂອງພວກເຂົາເຕີບໃຫຍ່. ຜູ້ຄົນບໍ່ສາມາດເຂົ້າໃຈສິ່ງນີ້ບໍ? ທຸກສິ່ງທີ່ເຮັດໃຫ້ເຈົ້າບໍ່ດີແມ່ນຄວາມອ່ອນແອຂອງເຈົ້າເອງ ເຊິ່ງເປັນຈຸດອ່ອນທີ່ຊາຕານຈະໂຈມຕີ. ເຈົ້າເຫັນສິ່ງນີ້ຢ່າງຊັດເຈນບໍ? ເປັນຫຍັງພຣະເຈົ້າຈຶ່ງກ່າວແບບນີ້? "ເຮົາຂໍຈາກ ມະນຸດ ດ້ວຍຄວາມຕັ້ງໃຈ ແລະ ຄວາມຈິງໃຈທັງໝົດ. ພວກເຂົາບໍ່ສາມາດເຮັດສິ່ງທີ່ເຮົາຂໍໄດ້ແທ້ບໍ?" ພຣະທຳເຫຼົ່ານີ້ໝາຍເຖິງຫຍັງ? ເປັນຫຍັງພຣະເຈົ້າຈຶ່ງຖາມຄຳຖາມນີ້? ມັນສະແດງໃຫ້ເຫັນວ່າ ມະນຸດມີດ້ານທີ່ບໍ່ດີຫຼາຍເກີນໄປ ແລະ ປັດໄຈທີ່ບໍ່ດີພຽງປັດໄຈດຽວກໍພຽງພໍທີ່ຈະເຮັດໃຫ້ມະນຸດສະດຸດໄດ້. ເຈົ້າຄວນຈະເບິ່ງ ແລະ ເຫັນວ່າ ສິ່ງທີ່ບໍ່ດີຈະນຳຫຍັງມາສູ່ເຈົ້າ. ທຸກສິ່ງທີ່ພຣະເຈົ້າກະທຳ ແມ່ນເພື່ອເຮັດໃຫ້ມະນຸດສົມບູນ. ພຣະທຳເຫຼົ່ານີ້ຕ້ອງມີການອະທິບາຍເພີ່ມເຕີມບໍ? ບໍ່ເລີຍ. ຕາມທີ່ເຮົາເຫັນ ແມ່ນບໍ່ຈຳເປັນເລີຍ! ອາດເວົ້າໄດ້ວ່າ ມະນຸດຖືກຊາຕານຄອບງຳ ແຕ່ມັນຈະດີກວ່າຖ້າເວົ້າວ່າ ມະນຸດຖືກຄອບງຳໂດຍຄວາມບໍ່ດີ. ນີ້ແມ່ນການສະແດງອອກຢ່າງໜຶ່ງຂອງມະນຸດ ເຊິ່ງເປັນສ່ວນປະກອບຂອງເນື້ອໜັງຂອງມະນຸດ. ສະນັ້ນ,

ທຸກຄົນຈຶ່ງຕົກເຂົ້າສູ່ຄວາມບໍ່ດີໂດຍບໍ່ຮູ້ຕົວ ແລະ ຫຼັງຈາກນັ້ນກໍຕົກເຂົ້າໃນການຂ້ຽນຕີ. ນີ້ແມ່ນແຮ້ວທີ່ພຣະເຈົ້າໄດ້ຫ້າງໄວ້ໃຫ້ກັບມະນຸດ ແລະ ມະນຸດຈະທໍລະມານທີ່ສຸດໃນເວລານີ້. ຍ້ອນຜູ້ຄົນອາໄສຢູ່ໃນຄວາມບໍ່ດີ ມັນຈຶ່ງຍາກສຳລັບພວກເຂົາທີ່ຈະໜີຈາກການຂ້ຽນຕີ. ສິ່ງຕ່າງໆໃນປັດຈຸບັນບໍ່ແມ່ນເປັນແນວນີ້ແທ້ບໍ? ແຕ່ມະນຸດສາມາດເມີນເສີຍໄດ້ແນວໃດຕໍ່ພຣະທຳຂອງພຣະເຈົ້າທີ່ວ່າ: "ທຸກມື້ນີ້ຊາຕານແມ່ນອາລະວາດຢ່າງຮຸນແຮງຫຼາຍ. ເປັນຫຍັງເຮົາຈຶ່ງບໍ່ໃຊ້ໂອກາດນີ້ເພື່ອສະແດງຈຸດສຸມຂອງພາລະກິດຂອງເຮົາ ແລະ ເປີດເຜີຍອຳນາດຂອງເຮົາ?" ເຮົາກ່າວຄຳເຕືອນສອງສາມຄຳ ແລະ ທັນທີທັນໃດຜູ້ຄົນຈາກຄຣິສຕະຈັກກໍເຂົ້າສູ່ການຂ້ຽນຕີ. ນີ້ກໍຍ້ອນວ່າ ຫຼັງຈາກປະຕິບັດພາລະກິດຂອງພຣະເຈົ້າໄດ້ສອງເດືອນ ຜູ້ຄົນກໍຍັງບໍ່ໄດ້ປ່ຽນແປງຫຼາຍທາງດ້ານພາຍໃນ. ພວກເຂົາໄດ້ແຕ່ວິເຄາະພຣະທຳຂອງພຣະເຈົ້າດ້ວຍແນວຄິດຂອງພວກເຂົາ ແຕ່ທີ່ຈິງແລ້ວ ສະພາບຂອງພວກເຂົາແມ່ນບໍ່ໄດ້ປ່ຽນແປງເລີຍ. ພວກເຂົາຍັງເປັນຄົນບໍ່ດີ. ເມື່ອເປັນເຊັ່ນນີ້ ເວລາພຣະເຈົ້າກ່າວວ່າ ເວລາຂອງການຂ້ຽນຕີແມ່ນຢູ່ປາຍມືຜູ້ຄົນກໍໂສກເສົ້າເສຍໃຈທັນທີ ແລະ ຄິດວ່າ: "ຂ້ານ້ອຍບໍ່ຮູ້ວ່າ ຂ້ານ້ອຍຖືກພຣະເຈົ້າກຳນົດລ່ວງໜ້າບໍ ແລະ ຂ້ານ້ອຍບໍ່ຮູ້ວ່າ ຂ້ານ້ອຍສາມາດຕັ້ງໝັ້ນພາຍໃຕ້ການຂ້ຽນຕີນີ້ໄດ້ຫຼືບໍ່. ມັນຍິ່ງຍາກຫຼາຍທີ່ຈະຮູ້ວິທີການທີ່ພຣະເຈົ້າໃຊ້ໃນການຂ້ຽນຕີຜູ້ຄົນ". ມະນຸດທຸກຄົນຢ້ານການຂ້ຽນຕີ ແຕ່ພວກເຂົາກໍບໍ່ສາມາດປ່ຽນແປງໄດ້. ພວກເຂົາໄດ້ແຕ່ທົນທຸກຢູ່ຢ່າງງຽບໆ ແລະ ຢ້ານວ່າ ພວກເຂົາຈະບໍ່ສາມາດຕັ້ງໝັ້ນໄດ້. ໃນສະຖານະການດັ່ງກ່າວ ໂດຍບໍ່ມີການຂ້ຽນຕີຕົກໃສ່ພວກເຂົາ ແລະ ບໍ່ມີຄວາມທໍລະມານຈາກພຣະທຳ ມະນຸດແມ່ນໄດ້ເຂົ້າສູ່ການຂ້ຽນຕີຢ່າງບໍ່ຮູ້ຕົວ. ສະນັ້ນ, ພວກເຂົາທຸກຄົນຈຶ່ງຕື່ນເຕັ້ນ ແລະ ບໍ່ສະບາຍໃຈ. ສິ່ງນີ້ແມ່ນເອີ້ນວ່າ "ເຮັດດີໄດ້ດີ ເຮັດຊົ່ວໄດ້ຊົ່ວ" ຍ້ອນມະນຸດບໍ່ເຂົ້າໃຈພາລະກິດຂອງພຣະເຈົ້າເລີຍ. ທີ່ຈິງແລ້ວ ພຣະເຈົ້າບໍ່ເຕັມໃຈທີ່ຈະເສຍພຣະທຳເພີ່ມເຕີມອີກກັບຜູ້ຄົນເຫຼົ່ານີ້; ເບິ່ງຄືວ່າ ພຣະເຈົ້າໃຊ້ວິທີທາງທີ່ແຕກຕ່າງໃນການຈັດການກັບພວກເຂົາ ເຊິ່ງເປັນວິທີທາງທີ່ບໍ່ແມ່ນການຂ້ຽນຕີທີ່ແທ້ຈິງ. ມັນເປັນຄືກັບເວລາທີ່ຜູ້ຄົນຈັບລູກໄກ່ໄດ້ ແລະ ຈັບມັນຂຶ້ນມາເພື່ອເບິ່ງວ່າມັນແມ່ນໄກ່ແມ່ ຫຼື ໄກ່ຜູ້; ນີ້ອາດເບິ່ງຄືວ່າ ມັນບໍ່ແມ່ນເລື່ອງທີ່ສຳຄັນ ແຕ່ຢ່າງໃດກໍຕາມ ລູກໄກ່ຈະຕົກໃຈຢ້ານຢ່າງແຮງ ແລະ ມັນກໍຈະດີ້ນລົນເພື່ອເຮັດໃຫ້ຕົວເອງເປັນອິດສະຫຼະ ຄືກັບວ່າ ຢ້ານເຈົ້າຂອງຂອງມັນຈະຂ້າ ແລະ ກິນມັນ. ນີ້ກໍຍ້ອນວ່າ ລູກໄກ່ບໍ່ມີຄວາມຮູ້ກ່ຽວກັບຕົວມັນເອງ. ເປັນຫຍັງຄົນໃດໜຶ່ງຈະຕ້ອງຂ້າ ແລະ ກິນລູກໄກ່ທີ່ມີນ້ຳໜັກພຽງເທົ່າໃດອອນ? ນັ້ນຈະບໍ່ເປັນເລື່ອງໄຮ້ສາລະບໍ? ມັນເປັນດັ່ງທີ່ພຣະເຈົ້າກ່າວໄວ້ວ່າ: "ແລ້ວເປັນຫຍັງຜູ້ຄົນຈຶ່ງຫຼີກເວັ້ນເຮົາຕະຫຼອດ? ເປັນຍ້ອນເຮົາຈະປະຕິບັດຕໍ່ພວກເຂົາຄືລູກໄກ່ ທີ່ຈະຖືກຂ້າທັນທີທີ່ພວກມັນຖືກຈັບບໍ?" ສະນັ້ນ, ການທົນທຸກຂອງມະນຸດຈຶ່ງລ້ວນແລ້ວແຕ່ແມ່ນການອຸທິດຕົນຢ່າງ "ບໍ່ເຫັນແກ່ຕົວ" ແລະ ອາດຈະເອີ້ນໄດ້ວ່າ ເປັນລາຄາທີ່ບໍ່ມີຄຸນຄ່າທີ່ຕ້ອງຈ່າຍ. ມັນເປັນຍ້ອນວ່າ ຜູ້ຄົນບໍ່ຮູ້ຈັກຕົວເອງ ພວກເຂົາຈຶ່ງຮູ້ສຶກຢ້ານ; ດ້ວຍເຫດນັ້ນ, ພວກເຂົາຈຶ່ງບໍ່ສາມາດສ່ຽງຊີວິດຂອງພວກເຂົາ. ນີ້ແມ່ນຄວາມອ່ອນແອຂອງມະນຸດ. ພຣະທຳທີ່ກ່າວໂດຍພຣະເຈົ້າທີ່ວ່າ: "ໃນທີ່ສຸດແລ້ວ ຈຶ່ງປ່ອຍໃຫ້ມະນຸດຮູ້ຈັກຕົວເອງ. ນີ້ແມ່ນເປົ້າໝາຍສຸດທ້າຍຂອງເຮົາ" ແມ່ນຫຼ້າສະໄໝແລ້ວບໍ? ມີຜູ້ໃດທີ່ຮູ້ຈັກຕົວເອງຢ່າງແທ້ຈິງແດ່? ຖ້າຄົນໃດໜຶ່ງບໍ່ຮູ້ຈັກຕົວເອງ

ແລ້ວແມ່ນຫຍັງທີ່ມອບສິດໃຫ້ພວກເຂົາຖືກຂ້ຽນຕີ? ຈົ່ງເອົາລູກແກະເປັນຕົວຢ່າງ. ພວກມັນຈະສາມາດຖືກຂ້າໄດ້ແນວໃດ ຖ້າພວກມັນບໍ່ໄດ້ໃຫຍ່ເປັນແກະ? ມະນຸດຈະສາມາດກິນໝາກໄມ້ຈາກຕົ້ນໄມ້ທີ່ບໍ່ອອກໝາກໄດ້ແນວໃດ? ທຸກຄົນໃຫ້ຄວາມສຳຄັນກັບການ "ສັກຢາວັກຊີນ" ຫຼາຍເກີນໄປ. ສະນັ້ນ, ຜູ້ຄົນຈຶ່ງເຮັດພາລະກິດໃນການອົດອາຫານ ແລະ ພວກເຂົາກໍຫິວ. ນີ້ແມ່ນຕົວຢ່າງຂອງການເຮັດດີໄດ້ດີ ເຮັດຊົ່ວໄດ້ຊົ່ວ, ການທຳຮ້າຍຕໍ່ຕົວເອງ ແລະ ບໍ່ແມ່ນຄວາມໂຫດຮ້າຍ ແລະຄວາມປ່າເຖື່ອນຂອງພຣະເຈົ້າ. ໃນມື້ໜຶ່ງ ຖ້າມະນຸດຮູ້ຈັກຕົວເອງຢ່າງກະທັນຫັນ ແລະ ສັ່ນຢ້ານກົວຢູ່ຕໍ່ໜ້າພຣະເຈົ້າ, ພຣະເຈົ້າກໍຈະເລີ່ມຂ້ຽນຕີພວກເຂົາ. ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈຶ່ງຈະຮັບເອົາຄວາມລຳບາກຢ່າງເຕັມໃຈ, ເຊື່ອຟັງໃນຫົວໃຈ ແລະ ໃນຄຳເວົ້າ. ແຕ່ສຳລັບມື້ນີ້ເດ? ຜູ້ຄົນລ້ວນແລ້ວແຕ່ບໍ່ພໍໃຈທີ່ຖືກຂ້ຽນຕີ ຄືກັບເດັກນ້ອຍຖືກບັງຄັບໃຫ້ຄືວກິນ. ເມື່ອເປັນເຊັ່ນນີ້ ແລ້ວພວກເຂົາຈະບໍ່ຮູ້ສຶກອຸກໃຈໄດ້ແນວໃດ? ທຸກຄົນຄິດວ່າ "ດີໆ! ຢ່າງໃດຂ້ານ້ອຍກໍຈະຖືກຂ້ຽນຕີຢູ່ແລ້ວ, ຂ້ານ້ອຍກໍໜ້າຈະກົ້ມຫົວ ແລະ ຍອມຮັບຄວາມຜິດນັ້ນສະ! ຂ້ານ້ອຍສາມາດເຮັດຫຍັງໄດ້? ເຖິງຂ້ານ້ອຍຈະຮ້ອງໄຫ້, ຂ້ານ້ອຍກໍຍັງຕ້ອງເຮັດໃຫ້ພຣະເຈົ້າພໍໃຈ ແລ້ວຂ້ານ້ອຍສາມາດເຮັດຫຍັງໄດ້? ບໍ່ວ່າຈະດີ ຫຼືຮ້າຍ: ນີ້ແມ່ນເສັ້ນທາງທີ່ຂ້ານ້ອຍກຳລັງດຳເນີນຢູ່. ດີໆ! ຂ້ານ້ອຍຈະຖືວ່າ ເປັນໂຊກຮ້າຍຂອງຂ້ານ້ອຍ!" ຜູ້ຄົນບໍ່ໄດ້ຄິດແບບນີ້ບໍ?

ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ: "ມະນຸດຈະປະພຶດຕົນດີ; ຈະບໍ່ມີຜູ້ໃດກ້າຕໍ່ຕ້ານເຮົາ. ທຸກຢ່າງແມ່ນຢູ່ພາຍໃຕ້ການນຳພາຂອງເຮົາ ໂດຍປະຕິບັດ 'ພາລະກິດ' ທີ່ເຮົາໄດ້ມອບໝາຍໃຫ້". ນີ້ພຽງພໍທີ່ຈະສະແດງໃຫ້ເຫັນວ່າ ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ຖືກຂ້ຽນຕີດ້ວຍຄວາມເຕັມໃຈ ແລະ ຍິ່ງໄປກວ່ານັ້ນ ເປັນການຂ້ຽນຕີມາຈາກພຣະເຈົ້າ ຍ້ອນມະນຸດທຸກຄົນຕ້ອງການດຳລົງຊີວິດຢ່າງສະບາຍແທນທີ່ຈະຢູ່ແບບວຸ້ນວາຍ ແລະ ສັບສົນ. ພຣະເຈົ້າໄດ້ກ່າວວ່າ: "ມີຜູ້ໃດທີ່ບໍ່ຢ້ານຄວາມຕາຍແດ່? ຜູ້ຄົນສາມາດເຮັດໃຫ້ຊີວິດຂອງຕົວເອງຕົກຢູ່ໃນອັນຕະລາຍແທ້ບໍ່?" ສິ່ງນີ້ຖືກຕ້ອງຢ່າງແນ່ນອນ; ທຸກຄົນຢ້ານທີ່ຈະຕາຍ ແນ່ນອນ ຍົກເວັ້ນໃນເວລາທີ່ຖືກປົກຄຸມດ້ວຍຄວາມໂມໂຫ ຫຼື ຄວາມໝົດຫວັງ. ນີ້ແມ່ນແກ່ນແທ້ຂອງມະນຸດ ແລະ ມັນຍາກຫຼາຍທີ່ຈະແກ້ໄຂ. ໃນປັດຈຸບັນ ພຣະເຈົ້າໄດ້ມາເພື່ອແກ້ໄຂສະຖານະການທີ່ລຳບາກນີ້ໂດຍສະເພາະ. ມະນຸດທຸກຄົນບໍ່ມີອຳນາດ ເຊິ່ງດ້ວຍເຫດນັ້ນ ໃນທ່າມກາງພວກເຂົາ ພຣະເຈົ້າໄດ້ສ້າງໂຮງໝໍຊ່ຽວຊານໂດຍສະເພາະ ເຊິ່ງເປັນບ່ອນທີ່ພວກເຂົາອາດຈະໄດ້ຮັບການຮັກສາພະຍາດນີ້. ຜູ້ຄົນບໍ່ສາມາດເຮັດໃຫ້ຕົວເອງຫຼຸດພົ້ນອອກຈາກແຮ້ວຂອງໂລກໄພໄຂ້ເຈັບນີ້ໄດ້ ເຊິ່ງດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງກັງວົນໃຈວ່າ ປາກຂອງພວກເຂົາມີອາການອັກເສບ ແລະ ທ້ອງຂອງພວກເຂົາບວມ. ເມື່ອເວລາຜ່ານໄປ ບໍລິມາດຂອງອາຍແກັສໃນທ້ອງນ້ອຍຂອງພວກເຂົາຈະເພີ່ມຂຶ້ນ ເຊິ່ງເປັນຜົນເຮັດໃຫ້ຄວາມດັນເພີ່ມຂຶ້ນ ແລະ ໃນທີ່ສຸດ ທ້ອງຂອງພວກເຂົາກໍຈະແຕກ ແລະ ພວກເຂົາທຸກຄົນກໍຈະຕາຍ. ສະນັ້ນ, ຫຼັງຈາກນັ້ນ ພຣະເຈົ້າກໍຈະໄດ້ຮັກສາຄວາມເຈັບປ່ວຍຂອງມະນຸດທີ່ຮ້າຍແຮງນີ້ ຍ້ອນທຸກຄົນຈະໄດ້ຕາຍໄປແລ້ວ. ນີ້ບໍ່ແມ່ນການຮັກສາສະພາບຂອງມະນຸດບໍ? ພຣະເຈົ້າຕັ້ງໃຈມາເພື່ອປະຕິບັດພາລະກິດນີ້. ຍ້ອນຜູ້ຄົນຢ້ານຄວາມຕາຍຫຼາຍ ພຣະເຈົ້າເອງ

ຈຶ່ງມາປະຕິບັດພາລະກິດນີ້ພ້ອມກັບມະນຸດ; ຍ້ອນພວກເຂົາມີຄວາມກ້າພຽງໜ້ອຍດຽວ ພຣະອົງຈຶ່ງໄດ້ມອບການສາທິດຄັ້ງທຳອິດໃຫ້ພວກເຂົາເບິ່ງ. ຜູ້ຄົນພຽງແຕ່ເຕັມໃຈເຊື່ອຟັງຫຼັງຈາກທີ່ໄດ້ເຫັນແບບຢ່າງຂອງພຣະເຈົ້າເທົ່ານັ້ນ. ຍ້ອນເຫດຜົນນີ້ ພຣະເຈົ້າຈຶ່ງໄດ້ກ່າວວ່າ: "ຍ້ອນບໍ່ມີຜູ້ໃດສາມາດປະຕິບັດພາລະກິດຂອງເຮົາ, ເຮົາຈຶ່ງໄດ້ເອົາຕົນຢຽບສະໜາມຮົບດ້ວຍຕົວເອງ ເພື່ອຮ່ວມໃນການຕໍ່ສູ້ແຫ່ງຊີວິດ ແລະ ຄວາມຕາຍກັບຊາຕານ". ນີ້ແມ່ນການຕໍ່ສູ້ທີ່ຊີ້ຂາດ, ສະນັ້ນ ບໍ່ແມ່ນປາຕາຍ, ແຫກໍຕ້ອງຂາດ. ສິ່ງນີ້ແມ່ນແນ່ນອນ. ຍ້ອນໃນທີ່ສຸດແລ້ວຈິດວິນຍານຈະໄດ້ຮັບໄຊຊະນະ ແລະ ເນື້ອໜັງກໍຕ້ອງພົບກັບຄວາມຕາຍຢ່າງຫຼີກເວັ້ນບໍ່ໄດ້. ພວກເຈົ້າເຂົ້າໃຈຄວາມໝາຍທີ່ແອບແຝງນີ້ບໍ? ແຕ່ຈົ່ງຢ່າມີຄວາມອ່ອນໄຫວຫຼາຍ. ບາງເທື່ອປະໂຫຍກຂ້າງເທິງອາດຈະທຳມະດາ ຫຼື ບາງເທື່ອມັນອາດຈະຊັບຊ້ອນ. ບໍ່ວ່າຢ່າງໃດກໍຕາມ, ມະນຸດບໍ່ສາມາດຢັ່ງເຖິງມັນໄດ້. ສິ່ງນັ້ນແມ່ນແນ່ນອນ. ໃນການທົນທຸກ ມະນຸດແມ່ນສາມາດຍອມຮັບການຫຼໍ່ຫຼອມຈາກພຣະທຳຂອງພຣະເຈົ້າ ເຊິ່ງຄົນໃດໜຶ່ງອາດເອີ້ນວ່າ ເປັນໂຊກດີຂອງພວກເຂົາ ຫຼື ຄົນໃດໜຶ່ງອາດເອີ້ນວ່າ ເປັນໂຊກຮ້າຍຂອງພວກເຂົາ. ແຕ່ເຖິງຢ່າງໃດກໍຕາມ ເຮົາຍັງຈະເຕືອນວ່າ ເຈດຕະນາຂອງພຣະເຈົ້າແມ່ນຖືກຕ້ອງ ເຊິ່ງບໍ່ໄດ້ຄືກັນກັບເຈດຕະນາຂອງມະນຸດ ທີ່ມີເພື່ອເຮັດແຜນການ ແລະ ການຈັດຕຽມເພື່ອປະໂຫຍດຂອງພວກເຂົາເອງຕະຫຼອດ. ສິ່ງນີ້ໜ້າຈະຂ້ອນຂ້າງຊັດເຈນຢູ່ແລ້ວ; ຈົ່ງຢ່າຕົກຢູ່ໃນການໄຕ່ຕອງຢ່າງບໍ່ມີສິ້ນສຸດ. ສິ່ງນີ້ບໍ່ແມ່ນຄວາມອ່ອນແອຂອງມະນຸດຢ່າງແນ່ນອນບໍ? ພວກເຂົາທຸກຄົນແມ່ນເປັນແບບນີ້; ແທນທີ່ຈະມີຄວາມຮັກທີ່ຍິ່ງໃຫຍ່ຕໍ່ພຣະເຈົ້າ ພວກເຂົາພັດມີຄວາມຮັກທີ່ຍິ່ງໃຫຍ່ຕໍ່ຕົວເອງ. ພຣະອົງແມ່ນພຣະເຈົ້າທີ່ອິດສາມະນຸດ, ສະນັ້ນ ພຣະອົງຈຶ່ງຮຽກຮ້ອງຈາກພວກເຂົາສະເໝີ. ຍິ່ງຜູ້ຄົນຮັກຕົວເອງຫຼາຍສໍ່າໃດ ພຣະເຈົ້າກໍຍິ່ງຕ້ອງການໃຫ້ພວກເຂົາຮັກພຣະອົງຫຼາຍສໍ່ານັ້ນ ແລະ ເຂັ້ມງວດກັບຄວາມຕ້ອງການຂອງພຣະອົງທີ່ມີຕໍ່ພວກເຂົາຫຼາຍສໍ່ານັ້ນ. ມັນເປັນຄືກັບວ່າ ພຣະເຈົ້າເຈດຕະນາຢອກລໍ້ຜູ້ຄົນ. ຖ້າຜູ້ຄົນຮັກພຣະອົງຢ່າງແທ້ຈິງ ກໍເບິ່ງຄືກັບວ່າ ພຣະອົງບໍ່ຮັບຮູ້ພວກເຂົາ. ຍ້ອນສິ່ງນີ້ ຜູ້ຄົນຈຶ່ງເກົາຫົວຂອງພວກເຂົາ ແລະ ຄິດຢ່າງເລິກ. ນີ້ແມ່ນການເລົ່າເລື່ອງກ່ຽວກັບອຸປະນິໄສຂອງພຣະເຈົ້າ ເຊິ່ງເປັນພຽງການກ່າວໂດຍຫຍໍ້ກ່ຽວກັບໜຶ່ງ ຫຼື ສອງຢ່າງ. ນີ້ແມ່ນຄວາມປະສົງຂອງພຣະເຈົ້າ. ມັນແມ່ນສິ່ງທີ່ພຣະເຈົ້າຕ້ອງການໃຫ້ຜູ້ຄົນຮູ້ຈັກ ແລະ ມັນຈຳເປັນທີ່ສຸດ. ມັນແມ່ນວຽກງານໃໝ່ ແລະ ຜູ້ຄົນຕ້ອງພະຍາຍາມຢ່າງໜັກເພື່ອຜ່ານອຸປະສັກ ແລະ ສ້າງຄວາມກ້າວໜ້າໃໝ່. ພວກເຈົ້າເຂົ້າໃຈສິ່ງນີ້ແລ້ວບໍ? ພວກເຈົ້າຕ້ອງການໃຫ້ເຮົາກ່າວເພີ່ມເຕີມກ່ຽວກັບຫົວຂໍ້ນີ້ບໍ?

ໃນຍຸກທີ່ຜ່ານມາ ພຣະເຈົ້າໄດ້ກ່າວວ່າ: "ແມ່ນບໍ່ມີຄົນໃດເຄີຍຖືກເຮົາເລືອກ; ທຸກຄົນຖືກປະຕິເສດໂດຍໜັງສືທີ່ມີດຽງບຂອງເຮົາ. ນີ້ກໍຍ້ອນວ່າ ຜູ້ຄົນໃນອະດີດບໍ່ໄດ້ຮັບໃຊ້ເຮົາໂດຍສະເພາະ, ສະນັ້ນ ໃນການຕອບແທນ ເຮົາຈຶ່ງບໍ່ຮັກພວກເຂົາໂດຍສະເພາະ. ພວກເຂົາເອົາ 'ຂອງຂວັນ' ຂອງຊາຕານ ແລະ ຫຼັງຈາກນັ້ນກໍຫັນໜ້າມາ ແລະ ຖວາຍສິ່ງເຫຼົ່ານັ້ນໃຫ້ເຮົາ. ນີ້ບໍ່ແມ່ນການກ່າວຮ້າຍເຮົາບໍ?" ພຣະທຳເຫຼົ່ານີ້ສາມາດຖືກນຳມາອະທິບາຍໄດ້ແນວໃດ? ມັນເປັນດັ່ງທີ່ພຣະເຈົ້າກ່າວໄວ້ວ່າ: "ຂອງຂວັນທັງໝົດແມ່ນມາຈາກຊາຕານ". ບັນດາອັກຄະສາວົກ ແລະ ຜູ້ປະກາດພຣະທຳໃນອະດີດ

ລ້ວນແລ້ວແຕ່ອາໄສຂອງຂວັນເພື່ອປະຕິບັດພາລະກິດຂອງພວກເຂົາ ແລະ ຕະຫຼອດຍຸກຕ່າງໆຕໍ່ມາ ພຣະເຈົ້າໄດ້ໃຊ້ຂອງຂວັນຂອງພວກເຂົາເພື່ອປະຕິບັດພາລະກິດຂອງພຣະອົງ. ນີ້ແມ່ນເຫດຜົນທີ່ກ່າວວ່າ ການບໍລິການຂອງທຸກຄົນທີ່ມີຂອງຂວັນແມ່ນມາຈາກຊາຕານ. ຢ່າງໃດກໍຕາມ, ຍ້ອນສະຕິປັນຍາຂອງພຣະອົງ ພຣະອົງຈຶ່ງກ່າວ: "ເຮົາໃຊ້ອຸບາຍຂອງຊາຕານເປັນຕົວປະກອບຂອງເຮົາ" ສະນັ້ນ, ພຣະເຈົ້າເອີ້ນການບໍລິການຂອງຜູ້ຄົນທີ່ມີຂອງຂວັນວ່າ "ຂອງຂວັນຈາກຊາຕານ" ແລະ ຍ້ອນພວກເຂົາເປັນຄົນຂອງຊາຕານ ພຣະເຈົ້າຈຶ່ງເອີ້ນການກະທຳນີ້ວ່າ "ການກ່າວຮ້າຍ". ນີ້ບໍ່ແມ່ນການກ່າວຫາມະນຸດໂດຍບໍ່ມີຫຼັກຖານ; ກົງກັນຂ້າມ ມັນແມ່ນການອະທິບາຍທີ່ມີເຫດຜົນ ແລະ ເໝາະສົມ. ສະນັ້ນ ພຣະອົງຈຶ່ງກ່າວວ່າ: "ເຮົາບໍ່ໄດ້ເປີດເຜີຍຄວາມລັງກຽດຂອງເຮົາ; ກົງກັນຂ້າມ, ເຮົາໄດ້ປ່ຽນກົນອຸບາຍຂອງພວກເຂົາມາເປັນຜົນປະໂຫຍດຂອງເຮົາເອງໂດຍການເພີ່ມ 'ຂອງຂວັນ' ເຫຼົ່ານີ້ໃສ່ວັດຖຸແຫ່ງການຄຸ້ມຄອງຂອງເຮົາ. ຫຼັງຈາກນັ້ນ, ເມື່ອພວກເຂົາໄດ້ຖືກເຄື່ອງຈັກແປຮູບ, ເຮົາກໍຈະເຜົາຂີ້ເຫຼັກທີ່ຢູ່ຂ້າງໃນ". ນີ້ແມ່ນສິ່ງທີ່ມະຫັດສະຈັນຫຼາຍກ່ຽວກັບພາລະກິດຂອງພຣະເຈົ້າ. ຈຸດນີ້ແມ່ນສອດຄ່ອງກັບແນວຄິດຂອງມະນຸດໜ້ອຍທີ່ສຸດ ຍ້ອນບໍ່ມີຜູ້ໃດຈະຄິດວ່າ ຜູ້ທີ່ປົກຄອງເປັນກະສັດບໍ່ແມ່ນຜູ້ຄົນທີ່ມີຂອງຂວັນ ຫຼື ພວກເຂົາແມ່ນຜູ້ທີ່ບໍ່ມີຂອງຂວັນທີ່ພຣະເຈົ້າຮັກ. ດັ່ງທີ່ສາມາດເຫັນໄດ້ວ່າ ແນວຄວາມຄິດ ຫຼື ຄວາມຫວັງຂອງ ວິດເນສ ລີ ແລະ ວັອດແມນ ນີ ລ້ວນແລ້ວແຕ່ກາຍເປັນຂີ້ເທົ່າ ແລະ ຜູ້ຄົນທີ່ມີຂອງຂວັນໃນປັດຈຸບັນກໍເຊັ່ນດຽວກັນ. ຕອນນີ້ພຣະເຈົ້າໄດ້ເລີ່ມພາລະກິດນີ້ແລ້ວ ແລະ ພຣະອົງກຳລັງຄ່ອຍໆຖອນເອົາພາລະກິດທັງໝົດຂອງພຣະວິນຍານບໍລິສຸດໃນມະນຸດ ຜູ້ທີ່ເຮັດໜ້າທີ່ເປັນສິ່ງປະກອບຕໍ່ພາລະກິດຂອງພຣະອົງນັ້ນອອກ. ເມື່ອພາລະກິດຂອງພຣະເຈົ້າສຳເລັດລົງຢ່າງສົມບູນ ຜູ້ຄົນເຫຼົ່ານີ້ທຸກຄົນກໍຈະກັບຄືນໄປບ່ອນດັ່ງເດີມຂອງພວກເຂົາ. ຢ່າງໃດກໍຕາມ, ເຮົາຂໍຜັກດັນໃຫ້ມະນຸດບໍ່ໃຫ້ກະທຳການໂດຍທີ່ບໍ່ລະມັດລະວັງຍ້ອນພຣະທຳຂອງເຮົາ. ພວກເຈົ້າຄວນປະຕິບັດຕາມວິທີທາງທຳມະຊາດຂອງສິ່ງຕ່າງໆຕາມຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ເພື່ອບໍ່ໃຫ້ລົບກວນສິ່ງນັ້ນ. ພວກເຈົ້າເຂົ້າໃຈຈຸດນີ້ບໍ? ເພາະວ່າສິ່ງເຫຼົ່ານີ້ແມ່ນຂັ້ນຕອນ ແລະ ວິທີການຂອງພາລະກິດຂອງພຣະເຈົ້າ. ເມື່ອພຣະເຈົ້າ "ແປຮູບ" "ຂອງຂວັນ" ເຫຼົ່ານີ້ໃຫ້ເປັນ "ຜະລິດຕະພັນສຳເລັດຮູບ", ເຈດຕະນາທັງໝົດຂອງພຣະອົງກໍຈະຊັດເຈນ ແລະ ຂອງຂວັນທີ່ໃຫ້ບໍລິການແກ່ພຣະອົງທັງໝົດກໍຈະຖືກກຳຈັດ; ຢ່າງໃດກໍຕາມ, ພຣະເຈົ້າຈະມີຜະລິດຕະພັນສຳເລັດຮູບໄວ້ໃຊ້. ພວກເຈົ້າເຂົ້າໃຈສິ່ງນີ້ແລ້ວບໍ? ສິ່ງທີ່ພຣະເຈົ້າຕ້ອງການແມ່ນຜະລິດຕະພັນສຳເລັດຮູບ, ບໍ່ແມ່ນຂອງຂວັນຈຳນວນຫຼາຍທີ່ມະນຸດຖວາຍໃຫ້ແກ່ພຣະອົງ. ເມື່ອທຸກຄົນໄດ້ຢູ່ບ່ອນທີ່ຖືກຕ້ອງຂອງພວກເຂົາເທົ່ານັ້ນ ເຊິ່ງໝາຍຄວາມວ່າ ເມື່ອພຣະເຈົ້າໄດ້ກັບຄືນໄປຕຳແໜ່ງເດີມຂອງພຣະອົງ ແລະ ຜີສາດຮ້າຍ ພ້ອມທັງທູດສະຫວັນໄດ້ນັ່ງລົງໃນບ່ອນນັ່ງຂອງພວກເຂົາເອງ ໂດຍບໍ່ມີການຍົກເວັ້ນ, ຫຼັງຈາກນັ້ນເທົ່ານັ້ນ ຮອຍຍິ້ມທີ່ພໍໃຈຈະປາກົດຢູ່ໃບໜ້າຂອງພຣະເຈົ້າ ຍ້ອນເຈດຕະນາຂອງພຣະອົງຈະໄດ້ຮັບການຕອບສະໜອງ ແລະ ເປົ້າໝາຍຂອງພຣະອົງໄດ້ຮັບການບັນລຸຜົນ. ພຣະເຈົ້າຈະບໍ່ສະແຫວງຫາ "ຄວາມຊ່ວຍເຫຼືອ" ຈາກ "ຜີສາດຮ້າຍ" ອີກຕໍ່ໄປຍ້ອນເຈດຕະນາຂອງພຣະເຈົ້າຈະຖືກເປີດເຜີຍຕໍ່ມະນຸດຢ່າງເປີດເຜີຍ ແລະ ມະນຸດຈະບໍ່ມີວັນ

ຖືກເຮັດໃຫ້ຖ່າຍທອດສິ່ງເຫຼົ່ານັ້ນອີກຕໍ່ໄປ. ໃນເວລານີ້ ຮ່າງກາຍທີ່ເປັນເນື້ອໜັງຂອງຜູ້ຄົນຈະເປັນໜຶ່ງດຽວກັບຈິດວິນຍານຂອງພວກເຂົາ. ນີ້ແມ່ນສິ່ງທີ່ພຣະເຈົ້າເປີດເຜີຍຕໍ່ມະນຸດ; ມັນແມ່ນປາຍທາງສຸດທ້າຍຂອງວິນຍານ, ຈິດວິນຍານ ແລະ ຮ່າງກາຍ. ມັນແມ່ນຂໍ້ສະຫຼຸບຂອງຄວາມໝາຍດັ່ງເດີມຂອງ "ຄວາມເປັນມະນຸດ". ສິ່ງນີ້ບໍ່ຈຳເປັນຕ້ອງຖືກຄົ້ນຄວ້າຢ່າງລະອຽດ; ມັນພຽງພໍທີ່ຈະເຮັດໃຫ້ຮູ້ໜຶ່ງຢ່າງ ຫຼື ສອງຢ່າງກ່ຽວກັບສິ່ງນີ້. ພວກເຈົ້າເຂົ້າໃຈບໍ?

# ບົດທີ 36

ມີການເວົ້າວ່າ ບັດນີ້ ພຣະເຈົ້າໄດ້ເລີ່ມຂ້ຽນຕີມະນຸດແລ້ວ, ແຕ່ບໍ່ມີໃຜສາມາດເວົ້າໄດ້ຢ່າງແນ່ນອນ, ບໍ່ມີໃຜສາມາດໃຫ້ຄຳຕອບຢ່າງຊັດເຈນວ່າ ເຈດຕະນາເດີມຂອງການຂ້ຽນຕີນີ້ໄດ້ເກີດຂຶ້ນກັບມະນຸດແລ້ວ ຫຼື ບໍ່. ພຣະເຈົ້າເວົ້າວ່າ “ມະນຸດບໍ່ເຄີຍຄົ້ນພົບຫຍັງໃນການຂ້ຽນຕີຂອງເຮົາຈັກເທື່ອ, ຍ້ອນເຂົາບໍ່ໄດ້ເຮັດຫຍັງ ນອກຈາກຈັບແອກທີ່ຢູ່ອ້ອມຄໍຂອງພວກເຂົາດ້ວຍມືທັງສອງ, ຕາສອງໜ່ວຍຈ້ອງເບິ່ງເຮົາ ຄືກັບວ່າ ກຳລັງເບິ່ງສັດຕູ ແລະ ໃນຊ່ວງເວລານີ້ເອງ ທີ່ເຮົາເຫັນວ່າພວກເຂົາຈ່ອຍເຫຼືອງຫຼາຍສໍ່າໃດ. ມັນເປັນຍ້ອນສິ່ງນີ້, ເຮົາຈຶ່ງເວົ້າວ່າບໍ່ມີຜູ້ໃດຍຶດໝັ້ນໃນທ່າມກາງການທົດລອງເລີຍ”. ພຣະເຈົ້າບອກກັບມະນຸດກ່ຽວກັບຄວາມຈິງຂອງການຂ້ຽນຕີທີ່ຍັງບໍ່ທັນເກີດຂຶ້ນກັບເຂົາເທື່ອ ແລະພຣະອົງເຮັດແບບນັ້ນຢ່າງລະອຽດຫຼາຍໂດຍບໍ່ໄດ້ຕັດຫຍັງອອກເລີຍ. ມັນເປັນຄືກັບວ່າມະນຸດໄດ້ເຂົ້າສູ່ການຂ້ຽນຕີ ແລະ ບໍ່ສາມາດຍຶດໝັ້ນໄດ້ຢ່າງແທ້ຈິງ. ພຣະເຈົ້າໄດ້ພັນລະນາເຖິງຄວາມສົດໃສ ແລະຄວາມມີຊີວິດຊີວາກ່ຽວກັບພາບລັກສະນະທີ່ຂີ້ຮ້າຍຂອງມະນຸດ. ນີ້ຄືເຫດຜົນທີ່ມະນຸດຮູ້ສຶກມີຄວາມກົດດັນ: ຍ້ອນພຣະເຈົ້າເວົ້າວ່າພວກເຂົາບໍ່ເຄີຍຍຶດໝັ້ນຈັກເທື່ອໃນທ່າມກາງການທົດລອງ, ແລ້ວເຮົາຈະສາມາດເປັນຄົນທີ່ທຳລາຍສະຖິຕິໂລກ, ຖືກຍອມຮັບໂດຍປາສະຈາກທຳນຽມປະຕິບັດໄດ້ແນວໃດ? ໃນຊ່ວງເວລານີ້, ພວກເຂົາກໍເລີ່ມນຶກຄິດ. ໃນຄວາມເປັນຈິງແລ້ວ, ມັນກໍເປັນຄືດັ່ງພຣະເຈົ້າເວົ້າວ່າ “ເຮົາໄດ້ນຳພວກເຂົາໄປສູ່ທາງຕັນບໍ?” ແນ່ນອນ ພຣະເຈົ້າໄດ້ນຳທຸກຄົນໄປສູ່ທາງຕັນ ແລະ ສະນັ້ນໃນຄວາມຄິດຂອງພວກເຂົາ, ຜູ້ຄົນເຊື່ອຢູ່ສະເໝີວ່າ ພຣະເຈົ້າໂຫດຮ້າຍ ແລະ ໄຮ້ມະນຸດສະທຳ. ພຣະເຈົ້າໄດ້ຕຶກທຸກຄົນອອກຈາກທະເລແຫ່ງຄວາມທຸກທາງໂລກ, ຫຼັງຈາກນັ້ນ “ເພື່ອປ້ອງກັນອຸປະຕິເຫດໃດໜຶ່ງ, ເຮົາຈຶ່ງຂ້າ ‘ປາ’ ທຸກໂຕທີ່ຖືກຈັບໄດ້, ຫຼັງຈາກນັ້ນ ປາເຫຼົ່ານັ້ນກໍເຊື່ອຟັງ ແລະບໍ່ຕໍ່ວ່າແມ່ນແຕ່ໜ້ອຍດຽວ”. ນີ້ບໍ່ແມ່ນຄວາມຈິງບໍ? ພຣະເຈົ້າໄດ້ດຶງທຸກຄົນອອກຈາກທະເລແຫ່ງຄວາມຕາຍທີ່ຂົມຂື່ນໄປສູ່ເຫວເລິກແຫ່ງຄວາມຕາຍ, ພຣະອົງໄດ້ລາກພວກເຂົາທຸກຄົນໄປທີ່ “ບ່ອນປະຫານ” ພຣະອົງໄດ້ບັງຄັບພວກເຂົາໄປສູ່ຈຸດສິ້ນສຸດຂອງຫົນທາງ, ເປັນຫຍັງພຣະອົງຈຶ່ງບໍ່ເຮັດແບບນີ້ກັບບຸດຊາຍຄົນອື່ນ ແລະ ປະຊາຊົນຂອງພຣະເຈົ້າ? ແມ່ນຫຍັງຄືເຈດຕະນາຂອງພຣະອົງໃນການປະຕິບັດພາລະກິດດັ່ງກ່າວໃນປະເທດຂອງມັງກອນແດງໃຫຍ່? ເປັນຫຍັງມືຂອງພຣະເຈົ້າຈຶ່ງ “ພະຍາບາດ” ແບບນັ້ນ? ບໍ່ຕ້ອງສົງໄສເລີຍວ່າ “ເມື່ອເຮົາຕ້ອງການມະນຸດ, ເຂົາກໍລີ້ຊ່ອນຢູ່ສະເໝີ. ມັນເປັນຄືກັບວ່າເຂົາບໍ່ເຄີຍໄດ້ເຫັນເຫດການທີ່ເປັນຕາງຶດ, ຄືກັບເຂົາເກີດຢູ່ບ້ານນອກ ແລະ ບໍ່ຮູ້ຫຍັງກ່ຽວກັບເລື່ອງໃນເມືອງ”. ໃນຄວາມເປັນຈິງແລ້ວ, ພາຍໃນພວກເຂົາ ຜູ້ຄົນຖາມວ່າ “ແມ່ນຫຍັງຄືແຜນການຂອງພຣະເຈົ້າໃນການເຮັດແບບນີ້? ພຣະອົງບໍ່ໄດ້ເຮັດໃຫ້ພວກຂ້ານ້ອຍຕາຍບໍ? ແລ້ວແມ່ນຫຍັງຄືຈຸດສຳຄັນ? ເປັນຫຍັງຂັ້ນຕອນຂອງພາລະກິດຂອງພຣະອົງຈຶ່ງມີຢ່າງຫຼວງຫຼາຍ ແລະ ວ່ອງໄວ, ແລ້ວເປັນຫຍັງພຣະອົງຈຶ່ງບໍ່ຜ່ອນຜັນຕໍ່ພວກຂ້ານ້ອຍແມ່ນແຕ່ໜ້ອຍດຽວ?” ເຖິງຢ່າງໃດກໍຕາມ ຜູ້ຄົນບໍ່ກ້າເວົ້າເຊັ່ນນີ້ ແລະ ຍ້ອນພຣະທຳຂອງພຣະເຈົ້າເຮັດໃຫ້ພວກເຂົາປະຖິ້ມຄວາມຄິດດັ່ງກ່າວ, ກຳຈັດໂອກາດທີ່

ຈະເຮັດໃຫ້ພວກເຂົາຄິດໄປໄກກວ່ານັ້ນ, ພວກເຂົາຈຶ່ງບໍ່ມີທາງເລືອກອື່ນ ນອກຈາກປະຖິ້ມຄວາມຄິດເຫຼົ່ານັ້ນ. ມັນເປັນພຽງຍ້ອນພຣະເຈົ້າເປີດໂປງແນວຄິດທຸກຢ່າງຂອງມະນຸດ ແລະ ສະນັ້ນ ຜູ້ຄົນຈຶ່ງບັງຄັບແນວຄິດຂອງພວກເຂົາ ບໍ່ຍອມໃຫ້ມີແນວຄິດເຫຼົ່ານັ້ນອີກ. ໄດ້ເວົ້າມາກ່ອນໜ້ານີ້ແລ້ວວ່າ ຜູ້ຄົນເຫຼົ່ານີ້ແມ່ນລູກຫຼານຂອງມັງກອນແດງໃຫຍ່. ຄວາມຈິງແລ້ວ ຖ້າຈະໃຫ້ຊັດເຈນກວ່ານີ້ກໍຄື, ພວກເຂົາແມ່ນຕົວຕົນຂອງມັງກອນແດງໃຫຍ່. ເມື່ອພຣະເຈົ້າບັງຄັບໃຫ້ພວກເຂົາໄປສູ່ທາງຕັນ ແລະ ສັງຫານພວກເຂົາ, ແນ່ນອນ ວິນຍານຂອງມັງກອນແດງໃຫຍ່ກໍຈະບໍ່ມີໂອກາດປະຕິບັດພາລະກິດໃນພວກເຂົາອີກ. ດ້ວຍວິທີນີ້, ເມື່ອຜູ້ຄົນຍ່າງໄປເຖິງຈຸດສິ້ນສຸດຂອງຫົນທາງ ກໍຈະເປັນເວລາທີ່ມັງກອນແດງໃຫຍ່ຕາຍລົງເຊັ່ນກັນ. ສາມາດເວົ້າໄດ້ວ່າ ເປັນການໃຊ້ຄວາມຕາຍເພື່ອຕອບແທນ "ຄວາມເມດຕາອັນຍິ່ງໃຫຍ່" ຂອງພຣະເຈົ້າ ເຊິ່ງເປັນຈຸດປະສົງຂອງພາລະກິດຂອງພຣະເຈົ້າໃນປະເທດຂອງມັງກອນແດງໃຫຍ່. ເມື່ອຜູ້ຄົນພ້ອມທີ່ຈະເສຍສະຫຼະຊີວິດຂອງພວກເຂົາເອງ, ທຸກສິ່ງກໍຈະກາຍເປັນສິ່ງເລັກນ້ອຍ ແລະ ບໍ່ມີໃຜສາມາດເອົາຊະນະພວກເຂົາໄດ້. ແມ່ນຫຍັງຈະສຳຄັນໄປກວ່າຊີວິດ? ດ້ວຍເຫດນັ້ນຊາຕານຈຶ່ງບໍ່ສາມາດເຮັດຫຍັງໄດ້ອີກໃນຜູ້ຄົນ, ບໍ່ມີຫຍັງທີ່ມັນສາມາດເຮັດກັບມະນຸດໄດ້. ເຖິງແມ່ນວ່າໃນນິຍາມຂອງ "ເນື້ອໜັງ" ມີການເວົ້າວ່າ ເນື້ອໜັງຖືກຊາຕານເຮັດໃຫ້ເສື່ອມຊາມ, ຖ້າຜູ້ຄົນຖວາຍຕົນເອງຢ່າງແທ້ຈິງ ແລະ ບໍ່ໄດ້ຖືກຂັບເຄື່ອນໂດຍຊາຕານ, ແລ້ວກໍຈະບໍ່ມີໃຜສາມາດເອົາຊະນະພວກເຂົາໄດ້ ແລະ ໃນຊ່ວງເວລານີ້, ເນື້ອໜັງຈະປະຕິບັດອີກໜ້າທີ່ໜຶ່ງຂອງມັນ ແລະ ເລີ່ມຮັບການນໍາທາງຂອງພຣະວິນຍານຂອງພຣະເຈົ້າຢ່າງເປັນທາງການ. ນີ້ແມ່ນຂະບວນການທີ່ຈໍາເປັນ, ມັນຕ້ອງເກີດຂຶ້ນໄປຕາມຂັ້ນຕອນ; ຖ້າບໍ່ດັ່ງນັ້ນ, ພຣະເຈົ້າຈະບໍ່ມີທາງປະຕິບັດພາລະກິດໃນເນື້ອໜັງທີ່ດື້ດ້ານນີ້ໄດ້. ນີ້ແມ່ນສະຕິປັນຍາຂອງພຣະເຈົ້າ. ດ້ວຍວິທີນີ້, ທຸກຄົນຈຶ່ງໄດ້ເຂົ້າສູ່ສະຖານະການໃນປັດຈຸບັນຢ່າງບໍ່ຮູ້ຕົວ. ແລ້ວບໍ່ແມ່ນພຣະເຈົ້າບໍທີ່ນໍາພາມະນຸດໄປສູ່ "ທາງຕັນ"? ມັນອາດຈະມີຫົນທາງໃໝ່ທີ່ຖືກເປີດອອກໂດຍມະນຸດ? ເມື່ອເບິ່ງປະສົບການຂອງພວກເຈົ້າແລ້ວ, ມັນປາກົດວ່າ ພຣະເຈົ້ານໍາໃຊ້ວິທີການທີ່ໂຫດຮ້າຍທີ່ສຸດໃນພວກເຈົ້າ, ຈາກສິ່ງນັ້ນ ສາມາດເຫັນໄດ້ເຖິງຄວາມຊອບທໍາຂອງພຣະເຈົ້າ. ພວກເຈົ້າຈະບໍ່ສັນລະເສີນໄດ້ແນວໃດ? ສິ່ງທີ່ພຣະເຈົ້າປະຕິບັດຕໍ່ພວກເຈົ້າໄດ້ເຮັດໃຫ້ພວກເຈົ້າເຫັນເຖິງອຸປະນິໄສອັນຊອບທໍາຂອງພຣະເຈົ້າ; ສິ່ງນີ້ບໍ່ຄູ່ຄວນກັບການທີ່ພວກເຈົ້າຊື່ນຊົມພຣະເຈົ້າບໍ? ໃນປັດຈຸບັນ ໃນເສັ້ນທາງແຍກ ເມື່ອຍຸກເກົ່າຍັງມີຢູ່ ແລະ ຍຸກໃໝ່ຍັງບໍ່ທັນປາກົດຂຶ້ນເທື່ອ, ພວກເຈົ້າຈະເປັນພະຍານໃຫ້ກັບພຣະເຈົ້າແນວໃດ? ບັນຫາທີ່ສໍາຄັນດັ່ງກ່າວບໍ່ສົມຄວນແກ່ການພິຈາລະນາຢ່າງເລິກເຊິ່ງບໍ? ພວກເຈົ້າຍັງຕຶກຕອງບັນຫາອື່ນທີ່ຢູ່ນອກປະເດັນບໍ? ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ "ເຖິງແມ່ນຜູ້ຄົນເຄີຍຮ້ອງວ່າ 'ຄວາມເຂົ້າໃຈຈິ່ງຈະເລີນ' ບໍ່ມີໃຜໃຊ້ເວລາເພື່ອວິເຄາະຄໍາວ່າ 'ຄວາມເຂົ້າໃຈ' ເຊິ່ງສະແດງວ່າຜູ້ຄົນບໍ່ມີຄວາມປາຖະໜາທີ່ຈະຮັກເຮົາ"? ຖ້າພຣະເຈົ້າບໍ່ເວົ້າສິ່ງເຫຼົ່ານີ້, ພວກເຈົ້າຈະບໍ່ພະຍາຍາມເຂົ້າໃຈຫົວໃຈຂອງພຣະເຈົ້າດ້ວຍຄວາມຕັ້ງໃຈຂອງພວກເຈົ້າເອງບໍ?

ເຖິງແມ່ນວ່າ ໃນເວລາທີ່ບໍ່ດົນມານີ້ ບາງຄົນອາດເລີ່ມຮູ້ຈັກຈຸດປະສົງເລັກນ້ອຍ ແລະ ຈຸດສໍາຄັນຂອງການບັງເກີດເປັນມະນຸດຂອງພຣະເຈົ້າ, ເຮົາສາມາດເວົ້າໄດ້ຢ່າງແນ່ນອນວ່າ ຖ້າພຣະເຈົ້າບໍ່ໄດ້ກ່າວ

ຕໍ່ມະນຸດຢ່າງແຈ່ມແຈ້ງ, ບໍ່ມີຜູ້ໃດຈະສາມາດຄາດເດົາຈຸດປະສົງ ແລະ ຈຸດສຳຄັນຂອງການບັງເກີດເປັນມະນຸດຂອງພຣະເຈົ້າໄດ້. ນີ້ແມ່ນສິ່ງທີ່ແນ່ນອນ. ມັນຍັງບໍ່ຊັດເຈນຕໍ່ພວກເຈົ້າອີກບໍ? ທຸກສິ່ງທີ່ພຣະເຈົ້າເຮັດໃນຜູ້ຄົນແມ່ນສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງພຣະອົງ, ແຕ່ພວກເຂົາກໍບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້ຢ່າງຖືກຕ້ອງ. ນີ້ແມ່ນຂໍ້ບົກຜ່ອງຂອງມະນຸດ, ແຕ່ພຣະເຈົ້າກໍບໍ່ໄດ້ຕ້ອງການໃຫ້ຜູ້ຄົນມີຄວາມສາມາດເຮັດໃນສິ່ງໃດໜຶ່ງ, ພຣະອົງພຽງແຕ່ຂໍໃຫ້ພວກເຂົາຟັງ "ຄຳຕັກເຕືອນຂອງທ່ານໝໍ". ນີ້ແມ່ນເງື່ອນໄຂຂອງພຣະເຈົ້າ. ພຣະອົງຂໍໃຫ້ທຸກຄົນຮູ້ຈັກຊີວິດຂອງມະນຸດທີ່ແທ້ຈິງ, ຍ້ອນ "ໃນຫົວໃຈຂອງພວກເຂົາ, ຄຳວ່າ 'ຊີວິດມະນຸດ' ບໍ່ມີຢູ່ຈິງ, ພວກເຂົາບໍ່ຄຳນຶງເຖິງສິ່ງເຫຼົ່ານັ້ນ ແລະ ພຽງແຕ່ເບື່ອໜ່າຍພຣະທຳຂອງເຮົາ, ຄືກັບວ່າເຮົາໄດ້ກາຍມາເປັນແມ່ຍິງເຖົ້າທີ່ເວົ້າໄປທົ່ວທິບ". ໃນສາຍຕາຂອງຜູ້ຄົນ, ພຣະທຳຂອງພຣະເຈົ້າເປັນຄືກັບເຄື່ອງໃຊ້ປະຈຳວັນ, ພວກເຂົາບໍ່ປະຕິບັດຕໍ່ພຣະທຳເຫຼົ່ານັ້ນຄືກັບສິ່ງທີ່ສຳຄັນເລີຍ. ສະນັ້ນ ຜູ້ຄົນຈຶ່ງບໍ່ສາມາດນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ, ພວກເຂົາກາຍມາເປັນຄົນໂຊກຮ້າຍທີ່ໜ້າເວດທະນາທີ່ສຸດ ຜູ້ທີ່ຮູ້ຈັກຄວາມຈິງ ແຕ່ບໍ່ນຳເອົາຄວາມຈິງນັ້ນເຂົ້າສູ່ການປະຕິບັດ. ສະນັ້ນ ຂໍ້ຜິດພາດນີ້ຂໍ້ດຽວຂອງມະນຸດກໍພຽງພໍທີ່ຈະເຮັດໃຫ້ພຣະເຈົ້າເບື່ອໜ່າຍເປັນເວລາດົນນານພໍສົມຄວນ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງເວົ້າຫຼາຍຄັ້ງວ່າ ຜູ້ຄົນບໍ່ສົນໃຈຕໍ່ພຣະທຳຂອງພຣະອົງ. ແຕ່ໃນແນວຄິດຂອງພວກເຂົາ, ຜູ້ຄົນຄິດສິ່ງດັ່ງຕໍ່ໄປນີ້: "ແຕ່ລະມື້ພວກຂ້ານ້ອຍສຶກສາ ແລະ ວິເຄາະພຣະທຳຂອງພຣະເຈົ້າ, ແລ້ວຈະເວົ້າວ່າພວກຂ້ານ້ອຍບໍ່ສົນໃຈໃນພຣະທຳເຫຼົ່ານັ້ນໄດ້ແນວໃດ? ການເຮັດແບບນີ້ບໍ່ແມ່ນການປະຕິບັດຢ່າງບໍ່ຍຸຕິທຳກັບພວກຂ້ານ້ອຍບໍ?" ແຕ່ຖ້າເຮົາວິເຄາະເພີ່ມເຕີມເລັກນ້ອຍ, ຜູ້ຄົນກໍຈະພາກັນໜ້າແດງ. ເມື່ອພວກເຂົາອ່ານພຣະທຳຂອງພຣະເຈົ້າ, ພວກເຂົາກໍງຶກຫົວຂອງພວກເຂົາ, ພວກເຂົາໝອບລົງ ແລະ ບຽດແຂ່ງບຽດຂາ, ຄືກັບໝານ້ອຍທີ່ແກວ່ງຫາງດີໃຈກັບຄຳເວົ້າຂອງເຈົ້ານາຍຂອງມັນ. ສະນັ້ນ ໃນຊ່ວງເວລານີ້ ຜູ້ຄົນຈຶ່ງຮູ້ສຶກບໍ່ຄູ່ຄວນ, ນໍ້າຕາກໍໄຫຼລົງອາບໜ້າຂອງພວກເຂົາ, ມັນເປັນຄືກັບວ່າພວກເຂົາປາຖະໜາທີ່ຈະກັບໃຈ ແລະ ເລີ່ມຕົ້ນໃໝ່, ແຕ່ຫຼັງຈາກເວລານີ້ໄດ້ຜ່ານໄປ, ຄວາມອາຍຂອງພວກເຂົາກໍຫາຍໄປທັນທີ, ທົດແທນດ້ວຍຄວາມດື້ດ້ານ, ພວກເຂົາປະພຣະທຳຂອງພຣະເຈົ້າໄວ້ຂ້າງຫຼັງ ແລະ ເຊື່ອຢູ່ສະເໝີວ່າບັນຫາຂອງພວກເຂົາມີຄວາມສຳຄັນກວ່າ, ບັນຫາຂອງພຣະເຈົ້າຕ້ອງມານຳຫຼັງ ແລະ ຍ້ອນການກະທຳເຫຼົ່ານີ້ຂອງພວກເຂົາ, ພວກເຂົາຈຶ່ງບໍ່ສາມາດນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດໄດ້ຈັກເທື່ອ. ເມື່ອຄວາມຈິງມາເຖິງ, ພວກເຂົາກໍເດ່ແຂນສອກຂອງພວກເຂົາອອກມາ[ກ], ສິ່ງນີ້ແມ່ນເປັນການຫັກຫຼັງຄົນຂອງພວກເຂົາເອງ, ບໍ່ຕ້ອງສົງໄສເລີຍທີ່ພຣະເຈົ້າກ່າວວ່າ "ພວກເຂົາ 'ແລ່ນໄປທາງອື່ນ' ໃນຂະນະທີ່ເພິ່ງພາເຮົາສຳລັບການບຳລຸງຊີບ". ຈາກສິ່ງນີ້ເທົ່ານັ້ນ ມັນຈຶ່ງສາມາດເຫັນໄດ້ວ່າບໍ່ມີຄວາມບົກຜ່ອງແມ່ນແຕ່ໜ້ອຍດຽວໃນພຣະທຳຂອງພຣະເຈົ້າ, ພຣະທຳເຫຼົ່ານັ້ນເປັນຈິງ ແລະ ບໍ່ໄດ້ມີການເວົ້າເກີນ

ກ "ເດ່ແຂນສອກຂອງຄົນໃດໜຶ່ງອອກມາ" ແມ່ນສຳນວນພາສາຈີນ ໂດຍໝາຍເຖິງບຸກຄົນທີ່ກຳລັງຊ່ວຍເຫຼືອຄົນອື່ນໂດຍເອົາປຽບຜູ້ຄົນທີ່ຢູ່ໃກ້ຊິດກັບຄົນນັ້ນ ຕົວຢ່າງເຊັ່ນ ພໍ່ແມ່, ລູກໆ, ຍາດພີ່ນ້ອງ ຫຼື ອ້າຍເອື້ອຍນ້ອງ.

ຄວາມເປັນຈິງແມ່ນແຕ່ໜ້ອຍດຽວ, ແຕ່ພຣະທຳເຫຼົ່ານັ້ນເບິ່ງຄືກັບວ່າ ຂ້ອນຂ້າງຖືກຕີລາຄາຕໍ່າກວ່າຄວາມເປັນຈິງ, ຍ້ອນວຸດທິພາວະຂອງມະນຸດມີໜ້ອຍເກີນໄປ, ເຂົາຈຶ່ງບໍ່ສາມາດແບກຮັບສິ່ງເຫຼົ່ານັ້ນໄດ້. ພຣະທຳຂອງພຣະເຈົ້າໄດ້ພັນລະນາຢ່າງແຈ່ມແຈ້ງກ່ຽວກັບສິ່ງຕ່າງໆຂອງມະນຸດແລ້ວ, ທັງພາຍໃນ ແລະ ພາຍນອກ, ພຣະທຳເຫຼົ່ານັ້ນໄດ້ສະຫຼັກດ້ວຍຄວາມຊັດເຈນທີ່ສຸດ, ສະແດງເຖິງຄວາມຄ້າຍຄືມີຊີວິດຊີວາທີ່ເປັນໃບໜ້າເດີມຂອງຊາຕານຢ່າງແທ້ຈິງ. ພຽງແຕ່ວ່າ ໃນຂັ້ນຕອນປັດຈຸບັນ, ຜູ້ຄົນຍັງບໍ່ທັນເຫັນທຸກສິ່ງຢ່າງຊັດເຈນ ແລະ ສະນັ້ນຈຶ່ງມີການເວົ້າວ່າພວກເຂົາບໍ່ໄດ້ມາເພື່ອຮູ້ຈັກຕົນເອງ. ມັນເປັນຍ້ອນສິ່ງນີ້ ເຮົາຈຶ່ງເວົ້າວ່າບົດຮຽນນີ້ຕ້ອງສືບຕໍ່, ມັນບໍ່ສາມາດຢຸດໄດ້. ເວລາທີ່ຜູ້ຄົນເລີ່ມຮູ້ຈັກຕົນເອງກໍເປັນເວລາທີ່ພຣະເຈົ້າໄດ້ຮັບສະຫງ່າລາສີ. ນີ້ແມ່ນເລື່ອງງ່າຍທີ່ຈະເຂົ້າໃຈ, ບໍ່ຈຳເປັນຕ້ອງໃຫ້ເຮົາເວົ້າເປັນລາຍລະອຽດ. ເຖິງຢ່າງໃດກໍຕາມ ມີສິ່ງໜຶ່ງທີ່ເຮົາຈະເຕືອນພວກເຈົ້າ, ແຕ່ວ່າກ່ອນອື່ນໝົດກໍຕ້ອງອ່ານພຣະທຳເຫຼົ່ານີ້ຂອງພຣະເຈົ້າກ່ອນ: “ໃນເວລາປັດຈຸບັນ, ຜູ້ຄົນບໍ່ເຄີຍເຊີດຊູເຮົາ, ເຮົາບໍ່ມີພື້ນທີ່ໃນຫົວໃຈຂອງພວກເຂົາ. ແລ້ວພວກເຂົາຈະສາມາດສະແດງຄວາມຮັກທີ່ແທ້ຈິງຕໍ່ເຮົາໃນມື້ແຫ່ງການທົນທຸກທີ່ຈະມາເຖິງໄດ້ແນວໃດ?” ແມ່ນຫຍັງຄືຄວາມໝາຍຂອງພຣະທຳເຫຼົ່ານີ້? ພຣະເຈົ້າກຳລັງເວົ້າວ່າການຂ້ຽນຕີຍັງບໍ່ທັນເກີດຂຶ້ນກັບມະນຸດເທື່ອ ເຊິ່ງສະແດງວ່າຍັງບໍ່ທັນມີຄວາມໝາຍເລິກເຊິ່ງຕໍ່ຄຳວ່າ “ຮູ້ຈັກຕົນເອງ” ເຈົ້າເຫັນສິ່ງນີ້ບໍ? ຫາກບໍ່ໄດ້ຜະເຊີນກັບຄວາມລຳບາກ ແລະ ການຫຼໍ່ຫຼອມ, ຜູ້ຄົນຈະສາມາດຮູ້ຈັກຕົນເອງໄດ້ແນວໃດ? ສິ່ງເຫຼົ່ານີ້ບໍ່ໄດ້ເປັນພຽງຄຳເວົ້າທີ່ວ່າງເປົ່າບໍ? ເຈົ້າໄວ້ວາງໃຈໃນທຸກສິ່ງທີ່ພຣະເຈົ້າໄດ້ກ່າວໄວ້ແທ້ບໍ? ເຈົ້າສາມາດແຍກແຍະພຣະທຳຂອງພຣະເຈົ້າບໍ່? ເປັນຫຍັງພຣະເຈົ້າຈຶ່ງເວົ້າສິ່ງເຫຼົ່ານີ້ “ເມື່ອເຫັນເຖິງການກະທຳຂອງມະນຸດ, ທາງເລືອກດຽວຂອງເຮົາກໍຄືການຈາກໄປ” ຊໍ້າໄປຊໍ້າມາ ແລະ ຍັງເວົ້າວ່າ “ມີພຽງແຕ່ເມື່ອພູເຂົາພັງທະລາຍລົງ ແລະ ແຜ່ນດິນໂລກຕັດແຍກອອກຈາກກັນ, ຜູ້ຄົນຈຶ່ງຄິດເຖິງພຣະທຳຂອງເຮົາ, ມີພຽງແຕ່ເມື່ອນັ້ນ ພວກເຂົາຈຶ່ງຕື່ນຂຶ້ນຈາກຄວາມຝັນຂອງພວກເຂົາ, ແຕ່ເວລານັ້ນໄດ້ມາເຖິງແລ້ວ, ພວກເຂົາຖືກທຳລາຍດ້ວຍນໍ້າຖ້ວມຄັ້ງໃຫຍ່, ຊາກສົບຂອງພວກເຂົາຟູເຕັມໜ້ານໍ້າ”? ເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າ “ຜູ້ຄົນຈຶ່ງຄິດເຖິງ” ແລະ ບໍ່ແມ່ນ “ຜູ້ຄົນເຊື່ອຟັງພຣະທຳຂອງເຮົາ”? ເປັນຄວາມຈິງບໍ່ວ່າພູເຂົາພັງທະລາຍລົງ ແລະ ແຜ່ນດິນໂລກຕັດແຍກອອກຈາກກັນ? ຜູ້ຄົນບໍ່ສົນໃຈໃນພຣະທຳເຫຼົ່ານັ້ນ, ພວກເຂົາປ່ອຍໃຫ້ພຣະທຳເຫຼົ່ານັ້ນຜ່ານໄປ ແລະ ສະນັ້ນ ພວກເຂົາກໍທົນທຸກກັບ “ຄວາມລຳບາກ” ຫຼາຍຢ່າງໃນພຣະທຳຂອງພຣະເຈົ້າ. ນີ້ເປັນຍ້ອນພວກເຂົາບໍ່ຮູ້ຈັກຄິດເກີນໄປ. ຍ້ອນຄວາມລົ້ມເຫຼວນີ້ຂອງມະນຸດ, ພຣະເຈົ້າຈຶ່ງເວົ້າວ່າ “ເຮົາເຊິ່ງເປັນ ‘ຄົນປະຫຼາດ’ ນີ້ທີ່ບໍ່ມີຮູນໍ້າຕາ ໄດ້ຮ້ອງໄຫ້ຫຼາຍຄັ້ງເພື່ອມະນຸດ. ເຖິງຢ່າງໃດກໍຕາມ ມະນຸດບໍ່ຮູ້ຫຍັງໃນສິ່ງນີ້ເລີຍ”. ຍ້ອນຜູ້ຄົນບໍ່ໃສ່ໃຈຕໍ່ພຣະທຳຂອງພຣະເຈົ້າ, ພຣະເຈົ້າຈຶ່ງໃຊ້ວິທີນີ້ເພື່ອເຕືອນພວກເຂົາ ແລະ ຮັບເອົາ “ຄວາມຊ່ວຍເຫຼືອ” ຂອງພວກເຂົາ.

ສຳລັບປັດຈຸບັນ, ເຮົາຈະບໍ່ທຳນາຍກ່ຽວກັບການພັດທະນາຂອງໂລກ, ແຕ່ຈະທຳນາຍບາງສິ່ງທີ່ກ່ຽວກັບໂຊກຊະຕາຂອງມະນຸດ. ແລ້ວເຮົາບໍ່ໄດ້ຂໍໃຫ້ຜູ້ຄົນຮູ້ຈັກຕົນເອງບໍ? ຈະສາມາດອະທິບາຍສິ່ງນີ້ໄດ້ແນວໃດ? ຜູ້ຄົນຄວນຮູ້ຈັກຕົນເອງແບບໃດ? ເມື່ອພຣະເຈົ້າ “ທໍລະມານ” ຜູ້ຄົນຢ່າງໜັກຈົນ

ພວກເຂົາບິນວົນວຽນຢູ່ລະຫວ່າງຊີວິດ ແລະ ຄວາມຕາຍ, ພວກເຂົາກໍເລີ່ມເຂົ້າໃຈໜ້ອຍໜຶ່ງກ່ຽວກັບຄວາມໝາຍຂອງຊີວິດມະນຸດ ແລະ ພວກເຂົາກໍເມື່ອຍລ້າກັບຊີວິດຂອງມະນຸດ, ເຊື່ອວ່າຊີວິດທັງໝົດຂອງຜູ້ຄົນບໍ່ໄດ້ເປັນຫຼາຍໄປກວ່າຄວາມຝັນ. ພວກເຂົາເຊື່ອວ່າຊີວິດຂອງມະນຸດແມ່ນຊີວິດແຫ່ງຄວາມເຈັບປວດ, ພວກເຂົາຈະຕາຍໂດຍບໍ່ໄດ້ປະສົບຄວາມສຳເລັດຫຍັງເລີຍ, ຊີວິດຂອງພວກເຂົາບໍ່ມີເປົ້າໝາຍ ແລະ ບໍ່ມີຄ່າ. ຊີວິດມະນຸດເປັນພຽງຄວາມຝັນ, ຄວາມຝັນທີ່ມີຄວາມໂສກເສົ້າ ແລະຄວາມສຸກໝູນວຽນໄປມາ. ໃນປັດຈຸບັນ, ຜູ້ຄົນດຳລົງຊີວິດເພື່ອພຣະເຈົ້າ, ແຕ່ຍ້ອນພວກເຂົາດຳລົງຊີວິດໃນໂລກຂອງມະນຸດ, ຊີວິດປະຈຳວັນຂອງພວກເຂົາຈຶ່ງຍັງວ່າງເປົ່າ ແລະ ບໍ່ມີຄ່າ, ເຮັດໃຫ້ທຸກຄົນຮູ້ວ່າ ຄວາມສຸກກັບພຣະເຈົ້າເປັນພຽງແຕ່ຄວາມສະບາຍທີ່ຜ່ານໄປ, ແຕ່ເມື່ອພວກເຂົາບໍ່ໄດ້ມີຄວາມສຸກກັບພຣະເຈົ້າ, ຖ້າພວກເຂົາຍັງດຳລົງຊີວິດໃນເນື້ອໜັງ ແຕ່ເຊື່ອໃນພຣະເຈົ້າ, ແລ້ວມັນຈະມີປະໂຫຍດຫຍັງ? ໃນເນື້ອໜັງ, ທຸກສິ່ງແມ່ນວ່າງເປົ່າສຳລັບມະນຸດ. ເມື່ອໄດ້ຜະເຊີນກັບການປ່ຽນແປງໃນຊີວິດມະນຸດ, ເມື່ອໄວຊະລາມາເຖິງ ຜົມຂອງມະນຸດກໍກາຍເປັນສີຂາວ, ໃບໜ້າຂອງເຂົາກໍແຫ່ວແຫ້ງ, ມືຂອງເຂົາກໍດ້ານ. ເຖິງແມ່ນເຂົາໄດ້ຈ່າຍລາຄາຢ່າງໃຫຍ່ຫຼວງ, ເຂົາກໍເກືອບບໍ່ໄດ້ຮັບຫຍັງເລີຍ. ສະນັ້ນພຣະທຳຂອງເຮົາຈຶ່ງກ້າວໄປອີກຂັ້ນຕອນໜຶ່ງ: ທຸກສິ່ງວ່າງເປົ່າສຳລັບຄົນທີ່ດຳລົງຊີວິດໃນເນື້ອໜັງ. ສິ່ງນີ້ເໜືອຂໍ້ສົງໄສ ແລະ ບໍ່ຈຳເປັນສຳລັບເຈົ້າຕ້ອງກວດສອບສິ່ງນີ້ຢ່າງລະອຽດ. ນີ້ແມ່ນໃບໜ້າເດີມຂອງຊີວິດມະນຸດທີ່ພຣະເຈົ້າໄດ້ກ່າວເຖິງຄັ້ງແລ້ວຄັ້ງເລົ່າ. ພຣະເຈົ້າບໍ່ຫຼີກເວັ້ນພຣະທຳເຫຼົ່ານີ້ຍ້ອນຜົນຂອງຄວາມອ່ອນແອຂອງມະນຸດ, ແຕ່ປະຕິບັດຕາມແຜນການເດີມຂອງພຣະອົງເທົ່ານັ້ນ. ບາງເທື່ອ, ພຣະທຳບາງຂໍ້ໃຫ້ການສະໜັບສະໜູນ ແລະ ຄວາມເຂົ້າໃຈແກ່ຜູ້ຄົນ ແລະ ບາງເທື່ອ ພຣະທຳບາງຂໍ້ກໍເຮັດສິ່ງທີ່ກົງກັນຂ້າມໂດຍສິ້ນເຊີງ, ຕັ້ງໃຈເຮັດໃຫ້ຜູ້ຄົນດຳລົງຊີວິດໃນບັນຍາກາດແຫ່ງຄວາມຕາຍແລະ ມັນເປັນຍ້ອນສິ່ງນີ້ແທ້ໆ, ພວກເຂົາຈຶ່ງທົນທຸກ. ສະນັ້ນ ບາງເທື່ອ ພຣະເຈົ້າຈຶ່ງໃຊ້ "ຍຸດທະສາດເມືອງຮ້າງ"[2] ເພື່ອເຈດຕະນາເຮັດໃຫ້ຜູ້ຄົນເຂົ້າໃຈຜິດ ແຕ່ພວກເຂົາກໍບໍ່ສາມາດເຫັນສິ່ງນີ້ເລີຍ, ພວກເຂົາຍັງຢູ່ໃນຄວາມມືດ. ເຖິງຢ່າງໃດກໍຕາມ ທຸກສິ່ງແມ່ນຢູ່ໃນກຳມືຂອງພຣະເຈົ້າ ແລະ ເຖິງແມ່ນຜູ້ຄົນຮູ້ຈັກເຖິງສິ່ງນີ້, ພວກເຂົາຈະປ້ອງກັນຈາກສິ່ງນັ້ນໄດ້ແນວໃດ? ສະນັ້ນ ບໍ່ມີຜູ້ໃດສາມາດຫຼົບໜີໄພຂົ່ມຂູ່ຂອງການຂ້ຽນຕີໄດ້, ແລ້ວພວກເຂົາຈະສາມາດເຮັດຫຍັງໄດ້? ພວກເຂົາພຽງແຕ່ສາມາດຍອມຕໍ່ການຈັດແຈງຂອງພຣະເຈົ້າ ແລະ ນັ້ນບໍ່ແມ່ນຍ້ອນພຣະເຈົ້າໄດ້ຈັບພວກເຂົາໄວ້ ແລະຈະບໍ່ປ່ອຍພວກເຂົາໄປບໍ? ພາຍໃຕ້ໄພຂົ່ມຂູ່ຂອງພຣະເຈົ້າເທົ່ານັ້ນ, ທຸກຄົນຈຶ່ງຈະສາມາດຕິດຕາມແນວທາງທຳມະຊາດໄດ້, ສິ່ງນີ້ບໍ່ແມ່ນຄວາມຈິງບໍ? ຖ້າບໍ່ແມ່ນຍ້ອນການຈັດແຈງຂອງພຣະເຈົ້າແລ້ວ, ຜູ້ຄົນຈະຍອມຮັບຄວາມພ່າຍແພ້ຢ່າງເຕັມໃຈໄດ້ແນວໃດ? ສິ່ງນັ້ນຈະບໍ່ແມ່ນເລື່ອງຕະຫຼົກບໍ? ເຖິງ

---

໒ "ຍຸດທະສາດເມືອງຮ້າງ" ແມ່ນຍຸດທະສາດທີ 32 ຈາກແຜນຍຸດທະສາດສາມສິບຫົກແຜນຂອງຈີນບູຮານ. ຍຸດທະສາດນີ້ແມ່ນປະກອບມີການນຳສະເໜີແນວໜ້າທີ່ກ້າຫານທີ່ຫຼອກລວງໃນການປົກປັງຄວາມບໍ່ພ້ອມເພື່ອຫຼອກລວງສັດຕູ.

ແມ່ນຊີວິດຂອງມະນຸດວ່າງເປົ່າ, ໃນເມື່ອຊີວິດຂອງພວກເຂົາສະດວກສະບາຍຢູ່ແລ້ວ ຈະມີຜູ້ໃດທີ່ເຕັມໃຈປະຖິ້ມໂລກຂອງມະນຸດຢ່າງງຽບໆ ແລະ ພະຍາຍາມເຮັດໃຫ້ພຣະເຈົ້າພໍໃຈ? ຜູ້ຄົນຕາຍທ່າມກາງຄວາມສິ້ນຫວັງ, ຜູ້ໃດເຄີຍຕາຍທ່າມກາງຄວາມອຸດົມສົມບູນແດ່ ໃນເມື່ອພວກເຂົາມີທຸກສິ່ງທີ່ພວກເຂົາຕ້ອງການ? ມີພຽງແຕ່ "ດວງດາວ" ທີ່ລົງມາຈາກທ້ອງຟ້າຈຶ່ງໄດ້ຮັບການຍົກເວັ້ນໃນສິ່ງນີ້. ເມື່ອປຽບທຽບກັບຊີວິດໃນສະຫວັນຊັ້ນສາມທີ່ດວງດາວດັ່ງກ່າວໄດ້ຮັບ, ຊີວິດເທິງແຜ່ນດິນໂລກຈະເປັນຄືກັບການດຳລົງຊີວິດໃນແດນມໍລະນະ, ເມື່ອຢູ່ພາຍໃຕ້ສະຖານະການດັ່ງກ່າວເທົ່ານັ້ນ ດວງດາວດັ່ງກ່າວຈຶ່ງເຕັມໃຈທີ່ຈະຕາຍ. ແຕ່ມີຜູ້ໃດໃນປັດຈຸບັນທີ່ເປັນດວງດາວໃນສະຫວັນ? ເຮົາກໍບໍ່ "ຊັດເຈນ" ກ່ຽວກັບເລື່ອງນີ້ເຊັ່ນກັນ. ໃຫ້ພວກເຮົາຄົ້ນຫາໃຫ້ທົ່ວ ແລະ ເບິ່ງວ່າພວກເຮົາຈະສາມາດຄົ້ນພົບຄົນນັ້ນ ຫຼື ບໍ່. ຖ້າຄົ້ນພົບແລ້ວ, ເຮົາຂໍໃຫ້ຜູ້ຄົນຊ່ວຍເຮົາສອບຖາມເບິ່ງວ່າ ເຂົາເຕັມໃຈທີ່ຈະປະຕິບັດຕາມພຣະທຳຂອງເຮົາທີ່ກ່າວມາຂ້າງເທິງນັ້ນ ຫຼື ບໍ່. ແຕ່ເຮົາມີຄຳເຕືອນສຳລັບພວກເຈົ້າແຕ່ລະຄົນ: ພວກເຈົ້າທຸກຄົນບໍ່ຈຳເປັນຕ້ອງຫຼິ້ນບົດບາດເປັນ "ວິລະບຸລຸດ" ແລະ ອາສາສະໝັກຕາຍ, ພວກເຈົ້າເຂົ້າໃຈບໍ?

# ບົດທີ 38

ເມື່ອພິຈາລະນາເຖິງລັກສະນະພິເສດທີ່ມີຢູ່ໃນຕົວຂອງມະນຸດ ນັ້ນກໍຄືໃບໜ້າທີ່ແທ້ຈິງຂອງມະນຸດ, ການທີ່ຈະສາມາດສືບຕໍ່ມາຈົນຮອດປັດຈຸບັນ ແທ້ຈິງແລ້ວ ແມ່ນບໍ່ໄດ້ງ່າຍເລີຍ ແລະ ຜ່ານສິ່ງນີ້ເທົ່ານັ້ນ ພະລັງອັນຍິ່ງໃຫຍ່ຂອງພຣະເຈົ້າຈຶ່ງປາກົດໃຫ້ເຫັນຢ່າງແທ້ຈິງ. ເມື່ອພິຈາລະນາເຖິງແກ່ນແທ້ຂອງເນື້ອໜັງ ພ້ອມກັບຄວາມຈິງທີ່ວ່າ ມະນຸດໄດ້ຖືກມັງກອນແດງຜູ້ຍິ່ງໃຫຍ່ເຮັດໃຫ້ເສື່ອມຊາມມາຈົນເຖິງປັດຈຸບັນ, ແລ້ວເຂົາຈະສາມາດສືບຕໍ່ຢືນຈົນມາຮອດປັດຈຸບັນໄດ້ແນວໃດ ຖ້າບໍ່ແມ່ນຍ້ອນການນຳພາຈາກພຣະວິນຍານຂອງພຣະເຈົ້າ? ມະນຸດບໍ່ຄູ່ຄວນມາຢູ່ຕໍ່ໜ້າພຣະເຈົ້າ ແຕ່ເພື່ອການຄຸ້ມຄອງຂອງພຣະອົງ ແລະ ເພື່ອນຳເອົາພາລະກິດທີ່ຍິ່ງໃຫຍ່ຂອງພຣະອົງໄປສູ່ການບັນລຸຜົນໃຫ້ໄວທີ່ສຸດ ພຣະເຈົ້າຈຶ່ງຮັກມະນຸດ. ຄວາມຈິງກໍຄື ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດແມ່ນສິ່ງທີ່ມະນຸດບໍ່ມີວັນສາມາດຕອບແທນໄດ້ໃນຊົ່ວຊີວິດຂອງເຂົາ. ບາງເທື່ອອາດມີບາງຄົນທີ່ປາຖະໜາຈະຕອບແທນພຣະຄຸນຂອງພຣະເຈົ້າດ້ວຍການເສຍສະຫຼະຊີວິດຂອງພວກເຂົາ ແຕ່ເຮົາຂໍບອກເຈົ້າວ່າ: ມະນຸດບໍ່ຄູ່ຄວນທີ່ຈະຕາຍຢູ່ຕໍ່ໜ້າພຣະເຈົ້າ ແລະ ດ້ວຍເຫດນັ້ນ ການຕາຍຂອງເຂົາກໍຈະບໍ່ມີປະໂຫຍດຫຍັງ. ນີ້ກໍຍ້ອນວ່າສຳລັບພຣະເຈົ້າແລ້ວ ຄວາມຕາຍຂອງມະນຸດແມ່ນບໍ່ເຖິງຂັ້ນທີ່ຈະມີຄ່າໃຫ້ກ່າວເຖິງ, ບໍ່ມີຄ່າແມ່ນແຕ່ກີບດຽວ ຄືກັບການຕາຍຂອງມົດຢູ່ພື້ນດິນ. ເຮົາແນະນຳມະນຸດບໍ່ໃຫ້ຖືຕົວເອງວ່າມີຄ່າສູງຫຼາຍເກີນໄປ ແລະ ບໍ່ໃຫ້ຄິດວ່າການຕາຍເພື່ອພຣະເຈົ້າແມ່ນມີນໍ້າໜັກຫຼາຍຄືກັບພູເຂົາໄຕ. ແທ້ຈິງແລ້ວ ການຕາຍຂອງມະນຸດແມ່ນເບົາຄືຂົນນົກ ເຊິ່ງບໍ່ມີຄ່າທີ່ຈະໃຫ້ກ່າວເຖິງ. ເວົ້າອີກຢ່າງໜຶ່ງກໍຄື ເນື້ອໜັງຂອງມະນຸດແມ່ນຖືກກຳນົດໃຫ້ຕາຍໂດຍທຳມະຊາດ ແລະ ສະນັ້ນ ໃນທີ່ສຸດ ຮ່າງກາຍທາງກາຍະພາບຕ້ອງຈົບສິ້ນລົງເທິງແຜ່ນດິນໂລກ. ນີ້ແມ່ນຄວາມຈິງຢ່າງແທ້ຈິງ ທີ່ບໍ່ມີໃຜສາມາດປະຕິເສດໄດ້. ນີ້ແມ່ນ "ກົດເກນແຫ່ງທຳມະຊາດ" ທີ່ເຮົາໄດ້ມາຈາກປະສົບການຊີວິດທັງໝົດຂອງມະນຸດ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງໄດ້ກຳນົດຈຸດຈົບຂອງມະນຸດດ້ວຍວິທີນີ້ ໂດຍທີ່ບໍ່ມີຜູ້ໃດຮູ້ເຖິງສິ່ງນີ້ມາກ່ອນ. ເຈົ້າເຂົ້າໃຈບໍ? ບໍ່ແປກໃຈເລີຍທີ່ພຣະເຈົ້າກ່າວວ່າ: "ເຮົາກຽດຊັງຄວາມບໍ່ເຊື່ອຟັງຂອງມະນຸດ. ເຮົາບໍ່ຮູ້ວ່າເປັນຫຍັງ; ເບິ່ງຄືວ່າເຮົາກຽດຊັງມະນຸດນັບແຕ່ຕອນຕົ້ນ ແລະ ເຖິງຢ່າງນັ້ນ ເຮົາກໍຮູ້ສຶກເຫັນອົກເຫັນໃຈເຂົາຢ່າງເລິກເຊິ່ງ. ສະນັ້ນ, ຜູ້ຄົນຈຶ່ງມີສອງທັດສະນະຕໍ່ເຮົາສະເໝີ ເນື່ອງຈາກວ່າ ເຮົາຮັກມະນຸດ ແລະ ເຮົາກໍຊັງມະນຸດເຊັ່ນກັນ".

ມີຜູ້ໃດທີ່ບໍ່ສັນລະເສີນພຣະເຈົ້າເນື່ອງຈາກການສະຖິດຂອງພຣະອົງ ຫຼື ການປາກົດຕົວຂອງພຣະອົງ? ໃນເວລານີ້ ມັນເປັນຄືກັບວ່າ ເຮົາໄດ້ລືມຄວາມບໍ່ບໍລິສຸດ ແລະ ຄວາມບໍ່ຊອບທຳພາຍໃນມະນຸດຢ່າງສິ້ນເຊີງ. ເຮົາເອົາຄວາມຄິດວ່າຕົວເອງຊອບທຳ, ຄວາມທະນົງຕົວ, ຄວາມບໍ່ເຊື່ອຟັງ, ການຂັດຂືນຂອງມະນຸດ ແລະ ຄວາມກະບົດທັງໝົດຂອງພວກເຂົາ ແລະ ຍູ້ພວກມັນທັງໝົດໄປຢູ່ດ້ານຫຼັງສະໝອງຂອງເຮົາ ແລະ ລືມກ່ຽວກັບມັນທັງໝົດ. ພຣະເຈົ້າບໍ່ໄດ້ຖືກຈຳກັດຍ້ອນສິ່ງເຫຼົ່ານີ້ທີ່ມະນຸດເປັນ. ຍ້ອນວ່າເຮົາ ໃນຖານະເປັນພຣະເຈົ້າກໍ "ມີຄວາມທຸກທໍລະມານຄືກັນ" ເຮົາຈຶ່ງໄດ້ເຮັດໃຫ້ຕົວເອງ

ຫຼຸດພົ້ນອອກຈາກຄວາມຫຍຸ້ງຍາກນີ້ເຊັ່ນກັນ ເພື່ອບໍ່ໃຫ້ເຮົາຖືກມະນຸດຈຳກັດເພີ່ມເຕີມໄປກວ່ານີ້. ເປັນຫຍັງຈຶ່ງຕ້ອງຫຍຸ້ງຍາກກັບສິ່ງທັງໝົດນີ້? ໃນເມື່ອມະນຸດບໍ່ເຕັມໃຈທີ່ຈະເຂົ້າຮ່ວມຄອບຄົວຂອງພຣະເຈົ້າກັບເຮົາ ແລ້ວເຮົາຈະສາມາດໃຊ້ອຳນາດຂອງເຮົາເພື່ອບັງຄັບພວກເຂົາໄດ້ແນວໃດ? ເຮົາບໍ່ເຮັດສິ່ງຕ່າງໆທີ່ເປັນການກົດຂີ່ມະນຸດ ແລະ ບໍ່ແປກໃຈເລີຍ ເພາະເຮົາເກີດໃນຄອບຄົວຂອງພຣະເຈົ້າ, ດ້ວຍເຫດນັ້ນ ແນ່ນອນຢູ່ແລ້ວ ມະນຸດ ແລະ ເຮົາຈຶ່ງແຕກຕ່າງກັນສະເໝີ. ນີ້ໄດ້ນຳໄປສູ່ສະພາບຂອງຄວາມພ່າຍແພ້ທີ່ເປັນຕາສັງເວດ ທີ່ເຂົາຜະເຊີນຢູ່ໃນປັດຈຸບັນ. ແຕ່ເຮົາສືບຕໍ່ມອບບ່ອນນອນຢ່າງກວ້າງຂວາງໃຫ້ແກ່ຄວາມອ່ອນແອຂອງມະນຸດ; ເຮົາມີທາງເລືອກໃດແດ່? ນີ້ບໍ່ແມ່ນຍ້ອນວ່າ ເຮົາບໍ່ມີອຳນາດບໍ? ບໍ່ແປກໃຈເລີຍທີ່ພຣະເຈົ້າສະແຫວງຫາທີ່ຈະ “ອອກບຳນານ” ຈາກ “ໜ່ວຍງານເຮັດວຽກ” ຂອງມະນຸດ ແລະ ຍິ່ງໄປກວ່ານັ້ນ ກໍຮຽກຮ້ອງຂໍກິນ “ເບ້ຍບຳນານ”. ເມື່ອເຮົາກ່າວຈາກມຸມມອງຂອງມະນຸດ, ມະນຸດກໍບໍ່ຟັງ ແຕ່ມະນຸດເຄີຍເຊື່ອຟັງແມ່ນແຕ່ໃນເວລາທີ່ເຮົາກ່າວຈາກມຸມມອງຂອງພຣະເຈົ້າບໍ? ບາງເທື່ອ ມື້ນັ້ນຈະມາເຖິງ ເມື່ອພຣະເຈົ້າ “ອອກບຳນານ” ຈາກ “ໜ່ວຍງານເຮັດວຽກ” ຂອງມະນຸດຢ່າງກະທັນຫັນ ແລະ ເມື່ອເວລານັ້ນມາເຖິງ ພຣະທຳຂອງພຣະເຈົ້າກໍຍິ່ງຈະຮຸນແຮງຂຶ້ນ. ໃນປັດຈຸບັນ ມັນອາດຈະເປັນຍ້ອນເຮົາ ທີ່ພຣະເຈົ້າກ່າວດ້ວຍວິທີນີ້ ແລະ ຖ້າມື້ນັ້ນມາເຖິງ ພຣະເຈົ້າຈະບໍ່ເປັນຄືເຮົາທີ່ “ເລົ່ານິທານໃຫ້ເດັກນ້ອຍອະນຸບານ” ຟັງຢ່າງອ່ອນໂຍນ ແລະ ຢ່າງອົດທົນ. ບາງເທື່ອສິ່ງທີ່ເຮົາກ່າວອາດຈະບໍ່ເໝາະສົມປານໃດ ແຕ່ພຣະເຈົ້າເຕັມໃຈທີ່ຈະໂຍະຍານກັບມະນຸດເລັກນ້ອຍຍ້ອນເຫັນແກ່ພຣະເຈົ້າທີ່ບັງເກີດເປັນມະນຸດ; ບໍ່ສະນັ້ນ ອະນາຄົດກໍຈະໂຫດຮ້າຍທີ່ຈະຄຳນຶງໄດ້. ດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ: “ເຮົາເຄີຍວາງມືຂອງເຮົາຈາກການຈັບກຸມຜູ້ຄົນໃນລະດັບໃດໜຶ່ງ ໂດຍອະນຸຍາດໃຫ້ພວກເຂົາເຮັດຕາມໃຈຢ່າງເປັນອິດສະຫຼະໃນຄວາມປາຖະໜາທາງເນື້ອໜັງຂອງພວກເຂົາ ແລະ ຍ້ອນສິ່ງນີ້ ພວກເຂົາຈຶ່ງກ້າປະພຶດຕົນໃນລັກສະນະແບບດື້ດ້ານ ໂດຍບໍ່ມີການຄວບຄຸມໃດໆເຊິ່ງສາມາດເຫັນໄດ້ວ່າ ພວກເຂົາບໍ່ຮັກເຮົາຢ່າງແທ້ຈິງ ເນື່ອງຈາກພວກເຂົາທຸກຄົນກຳລັງດຳລົງຊີວິດໃນເນື້ອໜັງ”. ເປັນຫຍັງພຣະເຈົ້າຈຶ່ງກ່າວຢູ່ໃນນີ້ວ່າ: “ເຮັດຕາມໃຈໃນຄວາມປາຖະໜາທາງເນື້ອໜັງຂອງພວກເຂົາ” ແລະ “ດຳລົງຊີວິດໃນເນື້ອໜັງ?” ຄວາມຈິງກໍຄື ມະນຸດຈະເຂົ້າໃຈພຣະທຳແບບນີ້ໂດຍທຳມະຊາດທີ່ບໍ່ມີການຕີຄວາມໝາຍຂອງເຮົາ. ບາງເທື່ອ ອາດຈະມີບາງຄົນທີ່ຈະເວົ້າວ່າ ພວກເຂົາບໍ່ເຂົ້າໃຈ ແລະ ເຮົາຂໍເວົ້າວ່າ ນີ້ແມ່ນກົລະນີຂອງການຖາມຄຳຖາມເມື່ອຄົນໃດໜຶ່ງຮູ້ຄຳຕອບຢູ່ແລ້ວເຊິ່ງເປັນການທຳທ່າຖາມ. ມີຄຳເຕືອນສອງສາມຄຳຄື: ເປັນຫຍັງພຣະເຈົ້າຈຶ່ງກ່າວວ່າ: “ສິ່ງດຽວທີ່ເຮົາຂໍຈາກມະນຸດແມ່ນຂໍໃຫ້ເຂົ້າຮ່ວມມືກັບເຮົາ”? ເປັນຫຍັງພຣະເຈົ້າຍັງກ່າວວ່າ ທຳມະຊາດຂອງມະນຸດແມ່ນປ່ຽນແປງຍາກ? ເປັນຫຍັງພຣະເຈົ້າຈຶ່ງກຽດຊັງທຳມະຊາດຂອງມະນຸດ? ແມ່ນຫຍັງຄືສິ່ງທີ່ເປັນທຳມະຊາດຂອງມະນຸດແທ້ຈິງ? ແມ່ນຫຍັງຄືສິ່ງທີ່ຢູ່ພາຍນອກທຳມະຊາດຂອງມະນຸດ? ມີຜູ້ໃດບໍທີ່ໄດ້ພິຈາລະນາຄຳຖາມເຫຼົ່ານີ້? ບາງເທື່ອ ນີ້ແມ່ນຫົວຂໍ້ໃໝ່ສຳລັບມະນຸດ ແຕ່ເຖິງຢ່າງໃດກໍຕາມ ເຮົາຂໍຮ້ອງໃຫ້ມະນຸດພິຈາລະນາສິ່ງນີ້ຢ່າງຖືກຕ້ອງ ຖ້າບໍ່ສະນັ້ນ ມະນຸດກໍຈະລ່ວງເກີນພຣະເຈົ້າຕະຫຼອດດ້ວຍວະລີເຊັ່ນ: “ທຳມະຊາດຂອງມະນຸດແມ່ນປ່ຽນແປງຍາກ”. ມັນມີປະໂຫຍດຫຍັງທີ່ຈະຕໍ່ຕ້ານພຣະອົງ

ດ້ວຍວິທີນີ້? ໃນທີ່ສຸດແລ້ວ ມັນບໍ່ແມ່ນເປັນພຽງການຫາເລື່ອງບໍ? ມັນຈະບໍ່ມີຈຸດຈົບແບບດຽວກັນກັບໂຍນໄຂ່ໃສ່ກ້ອນຫີນບໍ?

ໃນຄວາມຈິງແລ້ວ ທຸກການທົດລອງ ແລະ ການລໍ້ລວງທີ່ມະນຸດຕ້ອງປະສົບແມ່ນບົດຮຽນທີ່ພຣະເຈົ້າຕ້ອງການໃຫ້ມະນຸດຮຽນຮູ້. ຕາມເຈດຕະນາຂອງພຣະເຈົ້າແລ້ວ ມະນຸດສາມາດບັນລຸສິ່ງເຫຼົ່ານີ້ໄດ້ ເຖິງແມ່ນວ່າເຂົາຕ້ອງເສຍສະຫຼະສິ່ງທີ່ເຂົາຮັກ ແຕ່ຍ້ອນມະນຸດຮັກຕົວເອງຕະຫຼອດ ເຂົາຈຶ່ງບໍ່ສາມາດຮ່ວມມືກັບພຣະເຈົ້າໄດ້ຢ່າງແທ້ຈິງ. ພຣະເຈົ້າບໍ່ໄດ້ຂໍຫຍັງຫຼາຍຈາກມະນຸດ. ສິ່ງດຽວທີ່ພຣະອົງຂໍຈາກມະນຸດແມ່ນເພື່ອໃຫ້ໄດ້ບັນລຸຢ່າງງ່າຍດາຍ ແລະ ຢ່າງມີຄວາມສຸກ; ພຽງແຕ່ວ່າມະນຸດບໍ່ເຕັມໃຈທີ່ຈະທົນທຸກກັບຄວາມລຳບາກເທົ່ານັ້ນ. ຄືກັນກັບການເປັນລູກຂອງໃຜຜູ້ໜຶ່ງ ເຊິ່ງຄົນໃດໜຶ່ງແມ່ນສາມາດບັນລຸໜ້າທີ່ຂອງພວກເຂົາດ້ວຍການດຳລົງຊີວິດຢ່າງປະຢັດ ແລະ ເກັບອອມເພື່ອເບິ່ງແຍງພໍ່ແມ່ຂອງພວກເຂົາ. ແຕ່ພວກເຂົາຢ້ານວ່າ ພວກເຂົາອາດຈະບໍ່ໄດ້ກິນດີຢ່າງພຽງພໍ ຫຼື ເຄື່ອງນຸ່ງຫົ່ມຂອງພວກເຂົາຈະທຳມະດາເກີນໄປ, ດ້ວຍເຫດນັ້ນ ຍ້ອນເຫດຜົນໃດ ຫຼື ເຫດຜົນໜຶ່ງ ໜີ້ບຸນຄຸນທີ່ພວກເຂົາຕິດຄ້າງພໍ່ແມ່ຂອງພວກເຂົາສຳລັບການເບິ່ງແຍງດ້ວຍຄວາມຮັກຂອງພວກເພິ່ນຈຶ່ງຖືກລືມໄປຢ່າງສິ້ນເຊີງ ຄືກັບວ່າ ວຽກເບິ່ງແຍງພວກເພິ່ນແມ່ນສາມາດລໍຖ້າໄດ້ຈົນກວ່າລູກຈະຮັ່ງມີ. ເຮົາເຫັນໃນສິ່ງນີ້ວ່າ ໃນໃຈຂອງມະນຸດແມ່ນບໍ່ມີຄວາມກະຕັນຍູຕໍ່ພໍ່ແມ່ຂອງພວກເຂົາ. ພວກເຂົາທຸກຄົນແມ່ນລູກຊາຍອະກະຕັນຍູ ບາງເທື່ອຖ້ອຍຄຳຂອງເຮົາອາດຈະຮຸນແຮງເກີນໄປ ແຕ່ເຮົາບໍ່ສາມາດກ່າວແບບໂງ່ຈ້າຕໍ່ໜ້າຄວາມຈິງໄດ້. ເຮົາບໍ່ສາມາດ "ຮຽນແບບຜູ້ອື່ນ" ໃນການຕໍ່ຕ້ານພຣະເຈົ້າເພື່ອເຮັດໃຫ້ຕົວເຮົາເອງພໍໃຈ. ມັນເປັນຍ້ອນບໍ່ມີຜູ້ໃດຢູ່ແຜ່ນດິນໂລກທີ່ມີຫົວໃຈກະຕັນຍູຢ່າງແທ້ຈິງ ພຣະເຈົ້າຈຶ່ງໄດ້ກ່າວວ່າ: "ໃນສະຫວັນ, ຊາຕານແມ່ນສັດຕູຂອງເຮົາ; ຢູ່ແຜ່ນດິນໂລກ ມະນຸດແມ່ນສັດຕູຂອງເຮົາ. ຍ້ອນການຮ່ວມກັນລະຫວ່າງສະຫວັນ ແລະ ແຜ່ນດິນໂລກ, ເຮົາຈຶ່ງຖືວ່າພວກເຂົາທຸກຄົນມີຄວາມຜິດຈົນເຖິງເກົ້າຊົ່ວໂຄດ". ຊາຕານແມ່ນສັດຕູຂອງພຣະເຈົ້າ; ເຫດຜົນທີ່ຊາຕານກ່າວເຊັ່ນນີ້ກໍຍ້ອນວ່າມັນບໍ່ຕອບແທນພຣະເຈົ້າ ສຳລັບຄວາມຊ່ວຍເຫຼືອ ແລະ ຄວາມເມດຕາທີ່ຍິ່ງໃຫຍ່ຂອງພຣະອົງແຕ່ກົງກັນຂ້າມມັນໄດ້ "ພາຍເຮືອຕ້ານຄື້ນ" ແລະ ໃນການເຮັດເຊັ່ນນັ້ນ ມັນບໍ່ໄດ້ເຮັດໜ້າທີ່ຂອງມັນໃນການສະແດງການອຸທິດຕົນຢ່າງກະຕັນຍູຕໍ່ພຣະເຈົ້າ. ຜູ້ຄົນບໍ່ໄດ້ເປັນແບບນີ້ເຊັ່ນກັນບໍ? ພວກເຂົາບໍ່ສະແດງໃຫ້ເຫັນເຖິງຄວາມເຄົາລົບຢ່າງກະຕັນຍູຕໍ່ "ພໍ່ແມ່" ຂອງພວກເຂົາ ແລະ ບໍ່ເຄີຍຕອບແທນໜີ້ບຸນຄຸນທີ່ພວກເຂົາຕິດຄ້າງ "ພໍ່ແມ່" ຂອງພວກເຂົາ ສຳລັບການເບິ່ງແຍງດ້ວຍຄວາມຮັກຂອງພວກເພິ່ນ. ນີ້ພຽງພໍທີ່ຈະສະແດງໃຫ້ເຫັນວ່າ ຜູ້ຄົນຢູ່ແຜ່ນດິນໂລກແມ່ນພີ່ນ້ອງຂອງຊາຕານໃນສະຫວັນ. ມະນຸດ ແລະ ຊາຕານແມ່ນມີໃຈ ແລະ ຈິດໃຈດຽວກັນໃນການຕໍ່ຕ້ານພຣະເຈົ້າ ເຊິ່ງດ້ວຍເຫດນັ້ນ ມັນຈຶ່ງບໍ່ແປກໃຈເລີຍທີ່ພຣະເຈົ້າຈະເຮັດໃຫ້ພວກເຂົາຕິດແຮ້ວເກົ້າຊົ່ວໂຄດ ແລະ ບໍ່ໃຫ້ອະໄພຜູ້ໃດ. ໃນອະດີດພຣະເຈົ້າໄດ້ເຮັດໃຫ້ຜູ້ຮັບໃຊ້ຂອງພຣະອົງທີ່ໝອບຢູ່ສະຫວັນຈັດການກັບມະນຸດ ແຕ່ມັນບໍ່ໄດ້ເຊື່ອຟັງ ແລະ ກົງກັນຂ້າມ ມັນເຮັດຕາມອາລົມ ແລະ ການກະບົດຂອງຕົວມັນເອງ. ມະນຸດທີ່ກະບົດບໍ່ໄດ້ກ້າວໄປທາງໜ້າຕາມເສັ້ນທາງນີ້ເຊັ່ນກັນບໍ? ບໍ່ວ່າພຣະເຈົ້າຈະຫັດກຸມ "ການປົກຄອງ" ສໍ່າໃດກໍຕາມ ຜູ້ຄົນ

ກໍຈະບໍ່ສັ່ນຄອນງ່າຍໆ ແລະ ບໍ່ສາມາດຫັນຈາກເສັ້ນທາງຂອງພວກເຂົາໄດ້. ໃນມຸມມອງຂອງເຮົາ, ຖ້າມະນຸດສືບຕໍ່ໃນວິທີນີ້ ພວກເຂົາກໍຈະເຮັດໃຫ້ເກີດມີຄວາມພິນາດແກ່ຕົວເອງ. ບາງເທື່ອ ໃນຕອນນີ້ ເຈົ້າໄດ້ເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພຣະທຳເຫຼົ່ານີ້ທີ່ວ່າ: "ຜູ້ຄົນຈຶ່ງບໍ່ສາມາດຕັດຂາດຄວາມສຳພັນທີ່ຍັງເຫຼືອຢູ່ຂອງພວກເຂົາຈາກທຳມະຊາດເກົ່າຂອງພວກເຂົາ". ພຣະເຈົ້າໄດ້ເຕືອນມະນຸດຫຼາຍຄັ້ງແລ້ວວ່າ: "ຍ້ອນຄວາມບໍ່ເຊື່ອຟັງຂອງມະນຸດ ເຮົາຈຶ່ງຈາກເຂົາໄປ". ເປັນຫຍັງພຣະເຈົ້າຈຶ່ງກ່າວສິ່ງນີ້ຫຼາຍຄັ້ງ? ພຣະເຈົ້າຈະສາມາດໂຫດຮ້າຍໄດ້ແທ້ບໍ? ເປັນຫຍັງພຣະເຈົ້າຍັງກ່າວວ່າ: "ເຮົາບໍ່ແມ່ນໜຶ່ງໃນເຜົ່າພັນມະນຸດ" ບໍ? ໃນລະຫວ່າງຫຼາຍມື້ທີ່ຢູ່ລ້າໆ ມີຜູ້ໃດທີ່ໄດ້ຄິດຢ່າງຕັ້ງໃຈກ່ຽວກັບບັນຫາທີ່ລະອຽດເຫຼົ່ານີ້ບໍ? ເຮົາຂໍແນະນຳໃຫ້ມະນຸດເຮັດໃຫ້ຕົວເອງມີຄວາມເຂັ້ມແຂງຕໍ່ພຣະທຳຂອງພຣະເຈົ້າ ແລະ ບໍ່ໃຫ້ປະຕິບັດຕໍ່ພຣະທຳເຫຼົ່ານັ້ນແບບພໍເປັນພິທີ; ການເຮັດສິ່ງດັ່ງກ່າວຈະບໍ່ນຳເອົາປະໂຫຍດຫຍັງມາໃຫ້ເຈົ້າ ຫຼື ຜູ້ອື່ນ. ມັນດີທີ່ສຸດທີ່ຈະບໍ່ກ່າວໃນສິ່ງທີ່ບໍ່ຈຳເປັນຕ້ອງກ່າວ ແລະ ບໍ່ຄິດກ່ຽວກັບສິ່ງທີ່ບໍ່ຈຳເປັນຕ້ອງຄິດ. ນີ້ຈະບໍ່ງ່າຍກວ່າບໍ? ມີຫຍັງທີ່ສາມາດຜິດພາດຈາກການປະຕິບັດດັ່ງກ່າວນັ້ນບໍ? ບໍ່ມີຜູ້ໃດສາມາດຢຸດ "ເຄື່ອນໄຫວ" ກ່ອນທີ່ພຣະເຈົ້າຈະປະກາດການສິ້ນສຸດຂອງພາລະກິດຂອງພຣະອົງຢູ່ແຜ່ນດິນໂລກ; ບໍ່ມີຜູ້ໃດຈະລ້າງມືຂອງພວກເຂົາຈາກໜ້າທີ່ຂອງພວກເຂົາ. ຕອນນີ້ບໍ່ແມ່ນເວລາ; ຈົ່ງຢ່າສົມມຸດເອົາເອງ ເພື່ອປະຕິບັດເປັນຜູ້ນຳພາສຳລັບພຣະເຈົ້າ ຫຼື ເປັນແນວໜ້າ. ເຮົາຄິດວ່າ ມັນໄວເກີນໄປທີ່ຈະຢຸດໃນຕອນນີ້ ແລະ ຢຸດບໍ່ໃຫ້ເຄື່ອນໄຫວໄປທາງໜ້າ. ເຈົ້າຄິດວ່າແນວໃດ?

ພຣະເຈົ້ານຳມະນຸດເຂົ້າສູ່ທ່າມກາງການຂ້ຽນຕີ ແລະ ພຣະອົງນຳເອົາພວກເຂົາເຂົ້າສູ່ບັນຍາກາດແຫ່ງຄວາມຕາຍ ແຕ່ໃນທາງກັບກັນ ພຣະເຈົ້າຈະໃຫ້ມະນຸດເຮັດຫຍັງຢູ່ແຜ່ນດິນໂລກ? ແນ່ນອນຢູ່ແລ້ວວ່າ ຈຸດປະສົງຂອງມະນຸດບໍ່ແມ່ນການຮັບໃຊ້ເປັນຕູ້ເຄື່ອງນຸ່ງໃນເຮືອນຂອງພຣະເຈົ້າ ເຊິ່ງເປັນສິ່ງທີ່ບໍ່ສາມາດກິນ ແລະ ໃສ່ໄດ້ ນອກຈາກມີໄວ້ໃຫ້ເບິ່ງເທົ່ານັ້ນ. ຖ້າເປັນເຊັ່ນນັ້ນ ແລ້ວເປັນຫຍັງຈຶ່ງນຳໃຊ້ຫຼາຍຂັ້ນຕອນທີ່ຊັບຊ້ອນ ເພື່ອເຮັດໃຫ້ຜູ້ຄົນທົນທຸກຫຼາຍໃນເນື້ອໜັງ? ພຣະເຈົ້າກ່າວວ່າ: "ເຮົາກໍຄຸ້ມກັນມະນຸດໄປຍັງ 'ລານປະຫານ' ເນື່ອງຈາກວ່າ ການລ່ວງເກີນຂອງມະນຸດແມ່ນພຽງພໍທີ່ຈະສົມຄວນໄດ້ຮັບການຂ້ຽນຕີຈາກເຮົາ". ເທື່ອນີ້ ພຣະເຈົ້າປ່ອຍໃຫ້ຜູ້ຄົນຍ່າງໄປເດີ່ນປະຫານດ້ວຍຕົວເອງບໍ? ເປັນຫຍັງບໍ່ມີຜູ້ໃດ "ອ້ອນວອນຂໍຄວາມເມດຕາໃຫ້ພວກເຂົາ"? ສະນັ້ນ, ມະນຸດຄວນຮ່ວມມືແນວໃດ? ມະນຸດສາມາດປະຕິບັດໄດ້ຢ່າງແທ້ຈິງໂດຍປາສະຈາກການໃຊ້ອາລົມຄືດັ່ງພຣະເຈົ້າປະຕິບັດເມື່ອພຣະອົງເຮັດການພິພາກສາຂອງພຣະອົງບໍ? ຫຼັກໆແລ້ວ ປະສິດທິພາບຂອງພຣະທຳເຫຼົ່ານີ້ແມ່ນຂຶ້ນກັບວິທີປະຕິບັດຂອງມະນຸດ. ເມື່ອພໍ່ເອົາເງິນທີ່ລາວຫາໄດ້ກັບເມືອເຮືອນ ແລ້ວຖ້າແມ່ບໍ່ຮູ້ຈັກວິທີຮ່ວມມືກັບພໍ່ ຫຼື ວິທີຈັດການກັບເຮືອນຊານ ແລ້ວສະພາບຂອງເຮືອນນັ້ນຈະເປັນແນວໃດ? ຈົ່ງເບິ່ງສະພາບຂອງຄຣິສຕະຈັກໃນຕອນນີ້: ໃນຖານະເປັນຜູ້ນຳ, ພວກເຈົ້າຮູ້ສຶກແນວໃດກ່ຽວກັບມັນ? ພວກເຈົ້າຄວນຈະຈັດກອງປະຊຸມເພື່ອປຶກສາກ່ຽວກັບຜົນສະທ້ອນຂອງພວກເຈົ້າແຕ່ລະຄົນ. ຖ້າແມ່ເຮັດສິ່ງຕ່າງໆຢູ່ເຮືອນເສຍຫາຍ ແລ້ວລູກໆໃນຄອບຄົວດັ່ງກ່າວຈະເປັນແນວໃດ? ເປັນຄືເດັກກຳພ້າບໍ? ຫຼື ເປັນຄືຄົນຂໍທານ? ບໍ່ແປກໃຈເລີຍທີ່ພຣະເຈົ້າກ່າວວ່າ: "ທຸກຄົນຄິດວ່າແຜນການຂອງ

ເຮົາແມ່ນສັກສິດໂດຍທຳມະຊາດທີ່ຂາດ ‘ຄຸນນະພາບແຫ່ງສະຕິປັນຍາ’ ແຕ່ມີຜູ້ໃດສາມາດເຂົ້າໃຈວ່າເຮົາສາມາດເຫັນທະລຸທຸກສິ່ງໃນຄວາມເປັນມະນຸດຂອງເຮົາ?” ສຳລັບສະຖານະການທີ່ເຫັນໄດ້ຢ່າງຊັດເຈນດັ່ງກ່າວ ແມ່ນບໍ່ຈຳເປັນທີ່ຈະໃຫ້ພຣະເຈົ້າກ່າວຈາກຄວາມເປັນພຣະເຈົ້າຂອງພຣະອົງ. ດັ່ງທີ່ພຣະເຈົ້າໄດ້ກ່າວວ່າ: “ບໍ່ຈຳເປັນຕ້ອງໃຊ້ຄ້ອນຕີຂະໜາດໃຫຍ່ເພື່ອຕອກຕະປູ”. ບາງເທື່ອ ໃນເວລານີ້ອາດມີຜູ້ທີ່ມີປະສົບການທີ່ແທ້ຈິງກັບສຸພາສິດຂອງພຣະເຈົ້າທີ່ວ່າ: “ໃນທ່າມກາງມະນຸດ ແມ່ນບໍ່ມີຜູ້ໃດທີ່ຮັກເຮົາ”. ໃນຈຸດນີ້ ມັນເປັນຄືດັ່ງທີ່ພຣະເຈົ້າໄດ້ກ່າວໄວ້ວ່າ: “ມັນເປັນຍ້ອນວ່າພວກເຂົາໄດ້ມາເຖິງສະພາບທົ່ວໄປໃນປັດຈຸບັນ, ພວກເຂົາທຸກຄົນຈຶ່ງກົ້ມຫົວຂອງພວກເຂົາແບບບໍ່ເຕັມໃຈ ເພາະໃນໃຈຂອງພວກເຂົາ ພວກເຂົາຍັງບໍ່ເຊື່ອ”. ພຣະທຳເຫຼົ່ານີ້ຄືກັນກັບກ້ອງສ່ອງດາວ. ໃນອະນາຄົດທີ່ບໍ່ໄກນີ້ ມະນຸດຈະຍ່າງເຂົ້າໄປໃນສະຖານະການອື່ນ. ນີ້ເອີ້ນວ່າ ການທີ່ບໍ່ສາມາດແກ້ໄຂໄດ້. ພວກເຈົ້າເຂົ້າໃຈບໍ? ນັ້ນແມ່ນຄຳຕອບຕໍ່ສອງຄຳຖາມເຫຼົ່ານີ້ຂອງພຣະເຈົ້າທີ່ຖາມວ່າ: “ຜູ້ຄົນບໍ່ຢັບຢັ້ງຈາກບາບພຽງຍ້ອນພວກເຂົາຢ້ານເຮົາຈະຈາກໄປບໍ? ມັນບໍ່ແມ່ນຄວາມຈິງບໍ ທີ່ພວກເຂົາບໍ່ຈົ່ມວ່າພຽງຍ້ອນພວກເຂົາຢ້ານການຂ້ຽນຕີ?” ທີ່ຈິງແລ້ວ ຜູ້ຄົນໃນຂັ້ນຕອນປັດຈຸບັນແມ່ນຂ້ອນຂ້າງຂີ້ຄ້ານ ຄືກັບວ່າຖືກປົກຄຸມໄປດ້ວຍຄວາມເມື່ອຍເພຍ. ພວກເຂົາບໍ່ມີອາລົມທີ່ຈະໃສ່ໃຈກັບພາລະກິດຂອງພຣະເຈົ້າເລີຍ ແຕ່ເປັນຫ່ວງໃນການຈັດຕຽມ ແລະ ການສະໜອງເທົ່ານັ້ນ ເພື່ອປະໂຫຍດຂອງເນື້ອໜັງຂອງຕົວເອງ. ບໍ່ແມ່ນແບບນີ້ບໍ?

# ບົດທີ 39

ໃຫ້ພວກເຮົາໄປໄກກວ່າພຣະທຳຂອງພຣະເຈົ້າ ແລະ ເວົ້າໜ້ອຍກ່ຽວກັບບັນຫາຕ່າງໆທີ່ກ່ຽວຂ້ອງກັບຊີວິດຂອງພວກເຮົາ, ເພື່ອວ່າຊີວິດຂອງພວກເຮົາຈະເບັ່ງບານຫຼາຍຂຶ້ນ ແລະ ພວກເຮົາຈະດຳລົງຊີວິດຕາມຄວາມຫວັງຂອງພຣະເຈົ້າສຳລັບພວກເຮົາ. ໂດຍສະເພາະແລ້ວ, ການມາເຖິງຂອງປັດຈຸບັນເຊິ່ງເປັນເວລາທີ່ແຕ່ລະຄົນຈະຖືກຈັດແບ່ງຕາມປະເພດ ແລະ ເວລາແຫ່ງການຂ້ຽນຕີ, ຍິ່ງມີຄວາມຈຳເປັນທີ່ຈະຕ້ອງໃຫ້ຄວາມສຳຄັນກັບພາບລວມ ແລະ ໃສ່ໃຈກັບ "ຜົນປະໂຫຍດສ່ວນລວມ". ນີ້ແມ່ນຄວາມປະສົງຂອງພຣະເຈົ້າ ແລະ ມັນເປັນສິ່ງທີ່ທຸກຄົນຄວນບັນລຸ. ພວກເຮົາຈະບໍ່ຖວາຍພວກເຮົາເອງສຳລັບຄວາມປະສົງຂອງພຣະເຈົ້າທີ່ຢູ່ໃນສະຫວັນໄດ້ແນວໃດ? ພຣະເຈົ້າ "ກຳນົດຕົວເລກໃຫ້ກັບຜູ້ຄົນທຸກປະເພດ ແລະ ເຮັດເຄື່ອງໝາຍທີ່ແຕກຕ່າງກັນກັບຄົນທຸກປະເພດ ເພື່ອວ່າບັນພະບຸລຸດຂອງພວກເຂົາຈະສາມາດນຳພາພວກເຂົາກັບຄືນສູ່ຄອບຄົວຂອງພວກເຂົາໄດ້" ເຊິ່ງສະແດງວ່າ ຜູ້ຄົນໄດ້ຖືກຈັດແບ່ງຕາມປະເພດ ແລະ ຜົນຕາມມາກໍຄື ຜູ້ຄົນທຸກປະເພດກຳລັງເປີດເຜີຍຮູບຮ່າງທີ່ແທ້ຈິງຂອງພວກເຂົາ. ເມື່ອເປັນດັ່ງນັ້ນ ມັນກໍຍຸຕິທຳທີ່ຈະເວົ້າວ່າ ຜູ້ຄົນຊື່ສັດຕໍ່ບັນພະບຸລຸດຂອງພວກເຂົາ, ບໍ່ແມ່ນພຣະເຈົ້າ. ເຖິງຢ່າງໃດກໍຕາມ ທຸກຄົນຍັງຮັບໃຊ້ພຣະເຈົ້າພາຍໃຕ້ການນຳທາງຂອງບັນພະບຸລຸດຂອງພວກເຂົາ ເຊິ່ງເປັນຄວາມມະຫັດສະຈັນຂອງພາລະກິດຂອງພຣະເຈົ້າ. ທຸກສິ່ງກຳລັງຮັບໃຊ້ພຣະເຈົ້າ ແລະ ເຖິງແມ່ນຊາຕານລົບກວນຜູ້ຄົນ, ພຣະເຈົ້າກໍໃຊ້ໂອກາດນີ້ເພື່ອອາໄສ "ຊັບພະຍາກອນທ້ອງຖິ່ນ" ທີ່ຈະຮັບໃຊ້ພຣະອົງ. ດັ່ງທີ່ພຣະເຈົ້າເວົ້າວ່າ "ສະນັ້ນ ເຮົາຍັງຈະແບ່ງວຽກງານ ແລະ ປະຫານຄວາມພະຍາຍາມໃຫ້ອີກດ້ວຍ. ນີ້ແມ່ນສ່ວນໜຶ່ງຂອງແຜນການຂອງເຮົາ ແລະ ບໍ່ສາມາດຖືກຂັດຂວາງໂດຍມະນຸດຄົນໃດໄດ້". ຜູ້ຄົນບໍ່ສາມາດເຫັນທຸກສິ່ງທີ່ພຣະເຈົ້າໄດ້ກຳນົດ ແລະ ທຸກສິ່ງທີ່ພຣະເຈົ້າປາຖະໜາທີ່ຈະເຮັດໃຫ້ສຳເລັດ ກ່ອນທີ່ພຣະອົງຈະເຮັດ. ພວກເຂົາພຽງແຕ່ສາມາດເຫັນສິ່ງນັ້ນໄດ້ ເມື່ອພາລະກິດຂອງພຣະເຈົ້າຖືກເຮັດໃຫ້ສຳເລັດ; ຖ້າບໍ່ດັ່ງນັ້ນ ພວກເຂົາກໍຕາບອດ ແລະ ບໍ່ສາມາດເຫັນຫຍັງເລີຍ.

ໃນປັດຈຸບັນ ພຣະເຈົ້າມີພາລະກິດໃໝ່ທ່າມກາງຄຣິສຕະຈັກ. ພຣະອົງເຮັດໃຫ້ທຸກສິ່ງປະຕິບັດຕາມກົດເກນທຳມະຊາດ, ນຳມາເພື່ອແບກຮັບໜ້າທີ່ຂອງມະນຸດຢ່າງແທ້ຈິງ. ດັ່ງທີ່ພຣະເຈົ້າກ່າວວ່າ "ເຮົາປົກຄອງທຸກສິ່ງໃນທ່າມກາງສິ່ງທັງປວງທີ່ມີຢູ່, ເຮົາບັນຊາທຸກສິ່ງໃນທ່າມກາງສິ່ງທັງປວງ, ເຮັດໃຫ້ທຸກສິ່ງທີ່ມີຢູ່ນັ້ນປະຕິບັດຕາມກົດເກນທຳມະຊາດ ແລະ ຢູ່ພາຍໃຕ້ຄຳສັ່ງຂອງທຳມະຊາດ". ເຮົາບໍ່ຮູ້ວ່າແມ່ນຫຍັງຄືຄວາມເຂົ້າໃຈອັນຫຼັກແຫຼມທີ່ພວກເຈົ້າມີໃນການ "ປະຕິບັດຕາມກົດເກນທຳມະຊາດ", ສະນັ້ນໃຫ້ພວກເຂົາສົນທະນາກ່ຽວກັບສິ່ງນີ້. ນີ້ແມ່ນວິທີທີ່ເຮົາເຫັນສິ່ງນັ້ນ: ເພາະພວກເຂົາຖືກນຳພາກັບບ້ານໂດຍບັນພະບຸລຸດຂອງພວກເຂົາ, ຜູ້ຄົນທຸກປະເພດຕ້ອງອອກມາ ແລະ "ປະຕິບັດ". ຍ້ອນພວກເຂົາກຳລັງປະຕິບັດຕາມກົດເກນທຳມະຊາດ, ສິ່ງທີ່ເປັນທຳມະຊາດສຳລັບພວກເຂົາຈຶ່ງໄດ້ຖືກໃຊ້ເພື່ອເຮັດໃຫ້ພວກເຂົາແບກຮັບໜ້າທີ່ດັ່ງເດີມຂອງພວກເຂົາ, ເຮັດໃຫ້ພວກເຂົາປະຕິບັດຕາມການນຳພາຂອງພຣະວິນຍານບໍລິສຸດຕາມກົດເກນນີ້. ພາລະກິດຂອງພຣະວິນຍານບໍລິສຸດແມ່ນຖືກປະຕິບັດຕາມ

ສະພາວະທີ່ຢູ່ພາຍໃນແຕ່ລະຄົນ; ເວົ້າໃຫ້ຖືກຕ້ອງກໍຄື ສິ່ງນີ້ແມ່ນຖືກເອີ້ນວ່າ "ພຣະເຈົ້າຈັດການທຸກສິ່ງເພື່ອວ່າພວກມັນຈະຮັບໃຊ້ພຣະອົງ", ແລ້ວສິ່ງນີ້ກໍກ່ຽວພັນກັບການປະຕິບັດຕາມກົດເກນທຳມະຊາດ. ເຖິງແມ່ນບຸກຄົນໜຶ່ງມີອົງປະກອບຂອງຜີຮ້າຍຢູ່ໃນຕົວພວກເຂົາ, ພຣະເຈົ້າກໍຈະໃຊ້ສິ່ງນີ້ໃຫ້ເກີດປະໂຫຍດ, ປະກອບພາລະກິດຂອງພຣະວິນຍານບໍລິສຸດເຂົ້າໃນພື້ນຖານຂອງສິ່ງທີ່ຢູ່ພາຍໃນຕົວພວກເຂົາໂດຍທຳມະຊາດ, ເຮັດໃຫ້ພວກເຂົາເໝາະສົມທີ່ຈະຮັບໃຊ້ພຣະເຈົ້າ. ນີ້ແມ່ນທັງໝົດທີ່ເຮົາຈະເວົ້າກ່ຽວກັບ "ການປະຕິບັດຕາມກົດເກນທຳມະຊາດ", ບາງເທື່ອ ພວກເຈົ້າມີຂໍ້ສະເໜີທີ່ສູງສົ່ງກວ່າ. ເຮົາຫວັງວ່າ ພວກເຈົ້າຈະສາມາດສະໜອງຂໍ້ມູນທີ່ມີຄຸນຄ່າບາງຢ່າງ, ພວກເຈົ້າຈະວ່າແນວໃດ? ພວກເຈົ້າເຕັມໃຈທີ່ຈະຮ່ວມມືໃນການປະຕິບັດຕາມກົດເກນທຳມະຊາດນີ້ບໍ? ພວກເຈົ້າເຕັມໃຈທີ່ຈະແບ່ງພາລະກິດກັບພຣະເຈົ້າບໍ? ພວກເຈົ້າເຄີຍຄິດກ່ຽວກັບວິທີທີ່ຈະບັນລຸສິ່ງນີ້ບໍ? ເຮົາຫວັງວ່າຜູ້ຄົນຈະສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ພວກເຂົາຈະສາມາດມີຈິດໃຈດຽວກັນໃນການເຮັດໃຫ້ພຣະເຈົ້າພໍໃຈ ໂດຍເຫັນແກ່ອຸດົມການຮ່ວມກັນ ແລະ ສາມາດກ້າວໄປພ້ອມກັນບົນເສັ້ນທາງສູ່ອານາຈັກ. ແລ້ວຈຳເປັນຫຍັງທີ່ຈະມີແນວຄິດບໍ່ຈຳເປັນແບບນັ້ນ? ຈົນເຖິງປັດຈຸບັນນີ້ ການເປັນຢູ່ຂອງຜູ້ໃດແດ່ທີ່ບໍ່ແມ່ນເພື່ອເຫັນແກ່ພຣະເຈົ້າ? ແລ້ວເມື່ອມັນເປັນແບບນັ້ນ, ມີຄວາມຈຳເປັນຫຍັງທີ່ຈະຕ້ອງມີຄວາມເສຍໃຈ, ຄວາມໂສກເສົ້າ ແລະ ການຖອນຫາຍໃຈ? ສິ່ງນີ້ບໍ່ໄດ້ເປັນປະໂຫຍດຕໍ່ຜູ້ໃດເລີຍ. ຊີວິດຂອງຜູ້ຄົນທັງໝົດແມ່ນຢູ່ໃນກຳມືຂອງພຣະເຈົ້າ ແລະ ຖ້າມັນບໍ່ແມ່ນເພື່ອຄວາມຕັ້ງໃຈຂອງພວກເຂົາຕໍ່ໜ້າພຣະເຈົ້າ, ແລ້ວມີຜູ້ໃດທີ່ເຕັມໃຈດຳລົງຊີວິດຢ່າງສູນເປົ່າໃນໂລກຂອງມະນຸດທີ່ວ່າງເປົ່ານີ້ບໍ່? ເປັນຫຍັງຕ້ອງກັງວົນ ຟ້າວເຂົ້າ ແລະ ອອກຈາກໂລກນີ້? ຖ້າພວກເຂົາບໍ່ເຮັດຫຍັງສຳລັບພຣະເຈົ້າ, ຊີວິດທັງໝົດຂອງພວກເຂົາຈະບໍ່ສູນເສຍລ້າໆບໍ? ເຖິງແມ່ນພຣະເຈົ້າບໍ່ຖືວ່າການກະທຳຂອງເຈົ້າສົມຄວນແກ່ການກ່າວເຖິງ, ເຈົ້າຈະບໍ່ຍິ້ມຢ່າງພໍໃຈໃນຊ່ວງເວລາທີ່ເຈົ້າຕາຍບໍ? ເຈົ້າຄວນສະແຫວງຫາຄວາມກ້າວໜ້າທີ່ດີ, ບໍ່ແມ່ນການຖອຍຫຼັງໃນດ້ານລົບ, ສິ່ງນີ້ບໍ່ແມ່ນການປະຕິບັດທີ່ດີກວ່າບໍ? ຖ້າການກະທຳຂອງເຈົ້າແມ່ນເພື່ອເຮັດໃຫ້ພຣະເຈົ້າພໍໃຈແທ້ຈິງ, ແລ້ວເຈົ້າຈະບໍ່ຄິດລົບ ຫຼື ຖອຍຫຼັງ. ຍ້ອນມີສິ່ງຕ່າງໆທີ່ບໍ່ສາມາດຢັ່ງເຖິງໄດ້ໃນຫົວໃຈຂອງຜູ້ຄົນຢູ່ສະເໝີ, ຫາກພວກເຂົາບໍ່ຮູ້ຈັກເຖິງສິ່ງນັ້ນ ໜ້າຂອງພວກເຂົາຄືກັບເມກທີ່ມືດດຳ ເຊິ່ງນຳໄປສູ່ "ຂຸມໃຫຍ່" ຫຼາຍຂຸມທີ່ປາກົດຂຶ້ນໃນໜ້າຂອງພວກເຂົາໂດຍທີ່ພວກເຂົາບໍ່ຮູ້ຕົວ, ກໍ່ຕົວຄືກັບວ່າພື້ນດິນແຕກອອກ. ມັນເປັນຄືກັບວ່າພື້ນດິນເຄື່ອນໄຫວ, ເຮັດໃຫ້ "ເນີນ" ຫຼື "ຄ້ອຍ" ທີ່ຢູ່ເທິງພື້ນດິນນັ້ນເຄື່ອນຍ້າຍໂດຍທີ່ຜູ້ຄົນບໍ່ຮູ້. ໃນສິ່ງນີ້, ເຮົາບໍ່ໄດ້ເຍາະເຍີ້ຍຜູ້ຄົນ, ແຕ່ກ່າວເຖິງ "ຄວາມຮູ້ທາງພູມີສາດ".

ເຖິງແມ່ນພຣະເຈົ້າໄດ້ນຳພາທຸກຄົນເຂົ້າສູ່ການຂ້ຽນຕີ, ພຣະອົງກໍບໍ່ໄດ້ເວົ້າຫຍັງກ່ຽວກັບສິ່ງນີ້ເລີຍ. ກົງກັນຂ້າມ ພຣະອົງຕັ້ງໃຈຫຼີກເວັ້ນຫົວຂໍ້ນີ້ ແລະ ເລີ່ມຕົ້ນຫົວຂໍ້ໃໝ່, ເຊິ່ງໃນມຸມໜຶ່ງກໍເປັນຍ້ອນພາລະກິດຂອງພຣະເຈົ້າ ແລະ ໃນອີກມຸມໜຶ່ງກໍເພື່ອເຮັດໃຫ້ຂັ້ນຕອນນີ້ຂອງພາລະກິດສຳເລັດໂດຍທັນທີ. ຍ້ອນຈຸດປະສົງຂອງພຣະເຈົ້າໃນການປະຕິບັດຂັ້ນຕອນນີ້ຂອງພາລະກິດຖືກບັນລຸແຕ່ດົນນານແລ້ວ ຈຶ່ງບໍ່ຈຳເປັນທີ່ຈະເວົ້າເຖິງອີກຕໍ່ໄປ. ໃນປັດຈຸບັນ, ເຮົາບໍ່ຮູ້ວ່າພວກເຈົ້າໄດ້ເຫັນເຖິງວິທີການແຫ່ງ

ພາລະກິດຂອງພຣະເຈົ້າຫຼາຍສໍ່າໃດ; ໃນຄວາມສໍານຶກຂອງເຮົາ, ເຮົາຮູ້ສຶກຢູ່ສະເໝີວ່າ ພາລະກິດຂອງພຣະເຈົ້າບໍ່ໄດ້ຖືກແບ່ງອອກເປັນຍຸກຕ່າງໆ ແລະ ແບ່ງອອກເປັນຊ່ວງເວລາໄດ້ຢ່າງຊັດເຈນຄືກັບທີ່ມັນເຄີຍເປັນ. ກົງກັນຂ້າມ, ແຕ່ລະມື້ແມ່ນຖືກນໍາດ້ວຍວິທີການປະຕິບັດພາລະກິດຂອງມັນເອງ, ການປ່ຽນແປງເກີດຂຶ້ນທຸກໆສາມເຖິງຫ້າມື້ ແລະ ແມ່ນແຕ່ຫ້າມື້, ອາດມີສອງເນື້ອຫາທີ່ແຕກຕ່າງກັນໃນພາລະກິດຂອງພຣະເຈົ້າ. ສິ່ງນີ້ສະແດງເຖິງຄວາມໄວຂອງພາລະກິດຂອງພຣະເຈົ້າ; ກ່ອນທີ່ຜູ້ຄົນຈະມີເວລາຕອບໂຕ້ ແລະ ເບິ່ງຢ່າງລະມັດລະວັງ, ພຣະເຈົ້າກໍຈາກໄປໂດຍບໍ່ມີຮ່ອງຮອຍແລ້ວ. ສະນັ້ນ ຜູ້ຄົນຈຶ່ງບໍ່ສາມາດເຂົ້າໃຈພຣະເຈົ້າໄດ້ຢູ່ສະເໝີ, ເຊິ່ງໄດ້ນໍາໄປສູ່ຄວາມບໍ່ສາມາດເບິ່ງອອກໄດ້ເຖິງພາລະກິດຂອງພຣະວິນຍານບໍລິສຸດ. ເປັນຫຍັງພຣະເຈົ້າຈຶ່ງເວົ້າພຣະທໍາ ເຊັ່ນ: “ແລະ ແລ້ວເຮົາກໍຈາກມະນຸດໄປ”? ຜູ້ຄົນອາດໃຫ້ຄວາມສົນໃຈໜ້ອຍດຽວໃນພຣະທໍາເຫຼົ່ານີ້, ແຕ່ພວກເຂົາບໍ່ເຂົ້າໃຈຄວາມໝາຍຂອງພຣະທໍາເຫຼົ່ານີ້ເລີຍ. ໃນຕອນນີ້ເດ, ພວກເຈົ້າເຂົ້າໃຈແລ້ວບໍ? ບໍ່ແປກໃຈເລີຍທີ່ຜູ້ຄົນບໍ່ເຂົ້າໃຈເຖິງການສະຖິດຂອງພຣະວິນຍານບໍລິສຸດ. ພວກເຂົາຄົ້ນຫາພຣະເຈົ້າຢູ່ພາຍໃຕ້ແສງເດືອນທີ່ມືດມົວຢູ່ສະເໝີ, ສິ່ງນີ້ເປັນຄວາມຈິງທັງສິ້ນ ແລະ ມັນເປັນຄືກັບວ່າ ພຣະເຈົ້າຕັ້ງໃຈເຍາະເຍີ້ຍມະນຸດ, ເຮັດໃຫ້ສະໝອງຂອງທຸກຄົນຊໍ້າບວມ, ເພື່ອພວກເຂົາຈະຮູ້ສຶກມຶນງົງ ແລະ ສັບສົນ. ຈົນພວກເຂົາບໍ່ຮູ້ວ່າພວກເຂົາກໍາລັງເຮັດຫຍັງຢູ່, ມັນເປັນຄືກັບວ່າພວກເຂົາກໍາລັງຝັນ ແລະ ເມື່ອພວກເຂົາຕື່ນຂຶ້ນມາ, ພວກເຂົາກໍບໍ່ຮູ້ວ່າເກີດຫຍັງຂຶ້ນ. ພຽງໃຊ້ພຣະທໍາທີ່ທໍາມະດາບາງຂໍ້ຈາກພຣະເຈົ້າກໍເຮັດໃຫ້ຜູ້ຄົນເວົ້າບໍ່ອອກແລ້ວ. ບໍ່ແປກໃຈເລີຍທີ່ພຣະເຈົ້າເວົ້າວ່າ “ໃນປັດຈຸບັນ ເຮົາໄດ້ໂຍນທຸກຄົນສູ່ ‘ເຕົາຫຼໍ່ໃຫຍ່’ ເພື່ອຖືກຫຼໍ່ຫຼອມ. ເຮົາຢືນຂຶ້ນສູງ ແລະ ຫຼຽວເບິ່ງຢ່າງໃກ້ຊິດ ໃນຂະນະທີ່ພວກເຂົາເຜົາໄໝ້ໃນໄຟ ແລະ ເມື່ອຖືກບີບບັງຄັບດ້ວຍແປວໄຟ ຜູ້ຄົນກໍຄາຍຄວາມຈິງອອກມາ”. ໃນບັນດາພຣະທໍາທີ່ປ່ຽນແປງຢູ່ສະເໝີຂອງພຣະເຈົ້າ, ຜູ້ຄົນບໍ່ຮູ້ວ່າຈະເຮັດຫຍັງ; ໃນຄວາມຈິງແລ້ວ ດັ່ງທີ່ພຣະເຈົ້າເວົ້າວ່າ ການຂ້ຽນຕີໄດ້ເລີ່ມຕົ້ນແຕ່ດົນແລ້ວ ແລະ ຍ້ອນຜູ້ຄົນບໍ່ຮູ້ເຖິງສິ່ງນີ້ ພວກເຂົາຈຶ່ງຮູ້ແຕ່ໃນເວລາທີ່ພຣະເຈົ້າກ່າວຢ່າງແຈ່ມແຈ້ງເທົ່ານັ້ນ, ພວກເຂົາພຽງແຕ່ສົນໃຈຫຼັງຈາກທີ່ພຣະເຈົ້າບອກພວກເຂົາ. ມັນສາມາດເວົ້າໄດ້ວ່າ ພາລະກິດຂອງພຣະເຈົ້າໄດ້ຖືກປະຕິບັດມາແຕ່ດົນນານ ແຕ່ຜູ້ຄົນພຽງແຕ່ເລີ່ມຕົ້ນສຶກສາການຂ້ຽນຕີໃນຕອນນີ້ ມັນເປັນຄືກັບເມື່ອຜູ້ຄົນຮູ້ຈັກກ່ຽວກັບລະເບີດປະລາມະນູ, ແຕ່ຍ້ອນເວລາຍັງບໍ່ໄດ້ມາເຖິງ, ຜູ້ຄົນກໍບໍ່ໄດ້ໃສ່ໃຈມັນ; ມີພຽງແຕ່ເມື່ອບາງຄົນເລີ່ມສ້າງມັນຂຶ້ນ, ຜູ້ຄົນຈຶ່ງເລີ່ມໃສ່ໃຈ. ມີພຽງແຕ່ເມື່ອລະເບີດປະລາມະນູກາຍເປັນທີ່ຮູ້ຈັກຢ່າງກວ້າງຂວາງ, ຜູ້ຄົນຈຶ່ງເຂົ້າໃຈກ່ຽວກັບມັນຫຼາຍຂຶ້ນ. ມີພຽງແຕ່ເມື່ອພຣະເຈົ້າເວົ້າວ່າ ພຣະອົງຈະໂຍນມະນຸດລົງໃສ່ເຕົາຫຼໍ່, ຜູ້ຄົນຈຶ່ງຮູ້ຈັກໜ້ອຍໜຶ່ງ. ຖ້າພຣະເຈົ້າບໍ່ເວົ້າ ກໍຈະບໍ່ມີໃຜຮູ້, ບໍ່ແມ່ນບໍ? ສະນັ້ນ ພຣະເຈົ້າຈຶ່ງເວົ້າວ່າ “ສະນັ້ນ ຜູ້ຄົນຈຶ່ງເຂົ້າສູ່ເຕົາຫຼໍ່ໂດຍບໍ່ຮູ້ຕົວ ຄືກັບວ່າ ພວກເຂົາຖືກຈູງດ້ວຍເຊືອກ, ຄືກັບວ່າ ພວກເຂົາເລີ່ມມຶນຊາ”. ເປັນຫຍັງຈຶ່ງບໍ່ວິເຄາະໃນສິ່ງນີ້: ເມື່ອຜູ້ຄົນນໍາສະເໜີຄວາມຈິງ, ມັນບໍ່ແມ່ນເວລາທີ່ພຣະເຈົ້າເວົ້າວ່າ ການຂ້ຽນຕີໄດ້ເລີ່ມຕົ້ນແລ້ວບໍ ຫຼື ກ່ອນທີ່ພຣະເຈົ້າຈະເວົ້າວ່າການຂ້ຽນຕີໄດ້ເລີ່ມຕົ້ນແລ້ວ? ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ກ່ອນທີ່ພຣະເຈົ້າຈະກ່າວເຖິງການຂ້ຽນຕີ, ຜູ້ຄົນກໍເລີ່ມສາລະພາບ, ສະແດງວ່າການຂ້ຽນຕີໄດ້ເລີ່ມຕົ້ນກ່ອນທີ່ພຣະເຈົ້າຈະເວົ້າເຖິງມັນ, ນີ້ບໍ່ແມ່ນຄວາມຈິງບໍ?

# ບົດທີ 40

ສຳລັບພຣະເຈົ້າແລ້ວ ມະນຸດກໍເປັນຄືກັບຂອງຫຼິ້ນໃນກຳມືຂອງພຣະອົງ, ຄືກັບເສັ້ນໝີ່ທີ່ຍຶດຢູ່ໃນມືຂອງພຣະອົງ, ເສັ້ນໝີ່ທີ່ສາມາດຖືກເຮັດໃຫ້ບາງ ຫຼື ໜາຕາມທີ່ພຣະເຈົ້າປາຖະໜາ, ເພື່ອໃຊ້ປະໂຫຍດຕາມທີ່ພຣະອົງພໍໃຈ. ມັນຍຸຕິທຳທີ່ຈະເວົ້າວ່າ ມະນຸດເປັນຂອງຫຼິ້ນໃນມືຂອງພຣະເຈົ້າຢ່າງແທ້ຈິງ, ຄືກັບແມວເປີເຊຍທີ່ຜູ້ຍິງໄດ້ຊື້ມາຈາກຕະຫຼາດ. ໂດຍບໍ່ຕ້ອງສົງໄສ, ເຂົາເປັນຂອງຫຼິ້ນໃນມືຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນຈຶ່ງບໍ່ມີຫຍັງທີ່ຜິດໃນຄວາມຮູ້ຂອງເປໂຕ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ພຣະທຳ ແລະ ການກະທຳຂອງພຣະເຈົ້າທີ່ຢູ່ໃນຕົວມະນຸດແມ່ນຖືກເຮັດໃຫ້ສຳເລັດຢ່າງສະບາຍ ແລະ ຢ່າງງ່າຍດາຍ. ພຣະອົງບໍ່ໄດ້ຄິດຢ່າງໜັກ ຫຼື ວາງແຜນ ດັ່ງທີ່ຜູ້ຄົນຈິນຕະນາການ; ພາລະກິດທີ່ພຣະອົງປະຕິບັດໃນມະນຸດແມ່ນທຳມະດາແທ້ໆ ແລະ ເຊັ່ນດຽວກັນກັບພຣະທຳທີ່ພຣະອົງກ່າວຕໍ່ມະນຸດ. ເມື່ອພຣະເຈົ້າກ່າວ, ພຣະອົງເບິ່ງຄືກັບວ່າ ກ່າວໄປທົ່ວ, ພຣະອົງເວົ້າໄປຕາມຄວາມຄິດຂອງພຣະອົງ ໂດຍບໍ່ມີການຢັບຢັ້ງ. ເຖິງຢ່າງໃດກໍຕາມ ຫຼັງຈາກທີ່ອ່ານພຣະທຳຂອງພຣະເຈົ້າ, ຜູ້ຄົນກໍເຊື່ອທັງໝົດ, ພວກເຂົາປາກບໍ່ອອກ, ຕາຄ້າງ ແລະ ຕົກຕະລຶງ. ແມ່ນຫຍັງກຳລັງເກີດຂຶ້ນໃນນີ້? ສິ່ງນີ້ສະແດງວ່າສະຕິປັນຍາຂອງພຣະເຈົ້າຍິ່ງໃຫຍ່ສໍ່າໃດ. ຕາມທີ່ມະນຸດຈິນຕະນາການ, ຖ້າພາລະກິດຂອງພຣະເຈົ້າໃນມະນຸດຕ້ອງຖືກວາງແຜນຢ່າງຮອບຄອບໃຫ້ຖືກຕ້ອງ ແລະ ແນ່ນອນ, ແລ້ວເພື່ອຂະຫຍາຍຈິນຕະນາການນັ້ນໃຫ້ໄກອອກໄປອີກ, ສະຕິປັນຍາ, ຄວາມມະຫັດສະຈັນ ແລະ ຄວາມບໍ່ສາມາດຢັ່ງເຖິງໄດ້ຂອງພຣະເຈົ້າກໍຈະສາມາດບອກປະລິມານໄດ້ ເຊິ່ງສະແດງວ່າການທີ່ຜູ້ຄົນປະເມີນພຣະເຈົ້ານັ້ນແມ່ນຕໍ່າເກີນໄປ. ຍ້ອນມີຄວາມໂງ່ຈ້າໃນການກະທຳຂອງຜູ້ຄົນຢູ່ສະເໝີ, ພວກເຂົາຈຶ່ງວັດແທກພຣະເຈົ້າໃນລັກສະນະດຽວກັນ. ພຣະເຈົ້າບໍ່ໄດ້ວາງແຜນ ຫຼື ຈັດແຈງສຳລັບພາລະກິດຂອງພຣະອົງ; ກົງກັນຂ້າມ ພາລະກິດນັ້ນຖືກປະຕິບັດໂດຍພຣະວິນຍານຂອງພຣະເຈົ້າໂດຍກົງ ແລະ ຫຼັກການທີ່ພຣະວິນຍານຂອງພຣະເຈົ້າປະຕິບັດພາລະກິດກໍເປັນອິດສະຫຼະ ແລະ ບໍ່ມີການຈຳກັດ. ມັນເປັນຄືກັບວ່າພຣະເຈົ້າບໍ່ໃສ່ໃຈຕໍ່ສະພາວະຂອງມະນຸດ ແລະ ເວົ້າຕາມທີ່ພຣະອົງພໍໃຈ, ແຕ່ເຖິງຢ່າງນັ້ນ ມະນຸດກໍຍັງຍາກທີ່ຈະແຍກຕົນເອງອອກຈາກພຣະທຳຂອງພຣະເຈົ້າ ເຊິ່ງເປັນຍ້ອນສະຕິປັນຍາຂອງພຣະເຈົ້າ. ໃນທີ່ສຸດແລ້ວ ຄວາມຈິງກໍຄືຄວາມຈິງ. ເພາະພາລະກິດຂອງພຣະວິນຍານຂອງພຣະເຈົ້າໃນທຸກຄົນນັ້ນຊັດເຈນຫຼາຍ, ສິ່ງນີ້ຈຶ່ງພຽງພໍທີ່ຈະສະແດງເຖິງຫຼັກການແຫ່ງພາລະກິດຂອງພຣະເຈົ້າ. ຖ້າພຣະເຈົ້າຕ້ອງຈ່າຍລາຄາທີ່ຍິ່ງໃຫຍ່ດັ່ງກ່າວໃນພາລະກິດຂອງພຣະອົງຕໍ່ສິ່ງຖືກສ້າງ, ນັ້ນຈະບໍ່ແມ່ນກໍລະນີທີ່ໃຊ້ທ່ອນໄມ້ດີໃຫ້ເກີດປະໂຫຍດເລັກນ້ອຍບໍ? ພຣະເຈົ້າຕ້ອງປະຕິບັດດ້ວຍຕົນເອງບໍ? ມັນຈະຄຸ້ມຄ່າບໍ? ຍ້ອນພຣະວິນຍານຂອງພຣະເຈົ້າໄດ້ປະຕິບັດພາລະກິດເປັນເວລາດົນນານ ແລະ ເຖິງຢ່າງໃດກໍຕາມທົ່ວຍຸກຕ່າງໆ ພຣະວິນຍານຂອງພຣະເຈົ້າບໍ່ເຄີຍປະຕິບັດພາລະກິດໃນລັກສະນະນີ້, ບໍ່ມີໃຜເຄີຍຮູ້ຈັກວິທີ ແລະ ຫຼັກການທີ່ພຣະເຈົ້າປະຕິບັດພາລະກິດ, ພວກເຂົາຈຶ່ງບໍ່ຊັດເຈນຈັກເທື່ອ. ໃນປັດຈຸບັນພວກເຂົາຊັດເຈນແລ້ວ, ຍ້ອນພຣະວິນຍານຂອງພຣະເຈົ້າໄດ້ເປີດເຜີຍພວກເຂົາດ້ວຍພຣະອົງເອງ ແລະ

ສິ່ງນີ້ກໍຢູ່ເໜືອຂໍ້ສົງໄສ, ມັນຖືກສະແດງໂດຍພຣະວິນຍານຂອງພຣະເຈົ້າໂດຍກົງ, ບໍ່ໄດ້ຖືກສະຫຼຸບໂດຍມະນຸດ. ເປັນຫຍັງຈຶ່ງບໍ່ເດີນທາງໄປສະຫວັນຊັ້ນສາມ ແລະ ເບິ່ງວ່ານີ້ແມ່ນສິ່ງທີ່ເກີດຂຶ້ນແທ້ ຫຼື ບໍ່, ເບິ່ງວ່າຫຼັງຈາກປະຕິບັດພາລະກິດທັງໝົດນີ້ແລ້ວ, ຄວາມພະຍາຍາມຂອງພຣະເຈົ້າໄດ້ເຮັດໃຫ້ພຣະອົງໝົດແຮງ, ພຣະອົງປວດຫຼັງ ແລະ ເຈັດຂາ ຫຼື ບໍ່ດັ່ງນັ້ນກໍບໍ່ສາມາດກິນ ຫຼື ນອນຫຼັບໄດ້ ຫຼື ບໍ່; ແລະ ພຣະອົງຕ້ອງອ່ານຂໍ້ມູນອ້າງອີງຫຼາຍຢ່າງເພື່ອກ່າວພຣະທຳເຫຼົ່ານີ້ ຫຼື ບໍ່, ຮ່າງພຣະຄຳຂອງພຣະເຈົ້າຖືກເຜີຍອອກທົ່ວໂຕະ ຫຼື ບໍ່, ພຣະອົງເວົ້າຫຼາຍຈົນຄໍແຫ້ງ ຫຼື ບໍ່? ຄວາມຈິງແມ່ນກົງກັນຂ້າມກັນທັງສິ້ນ: ພຣະທຳຂ້າງເທິງບໍ່ມີຫຍັງກ່ຽວຂ້ອງກັບສະຖານທີ່ໆພຣະເຈົ້າອາໄສຢູ່ເລີຍ. ພຣະເຈົ້າເວົ້າວ່າ "ເຮົາໄດ້ສະຫຼະເວລາຢ່າງຫຼວງຫຼາຍ ແລະ ໄດ້ຈ່າຍລາຄາຢ່າງສູງເພື່ອເຫັນແກ່ມະນຸດ, ແຕ່ໃນເວລານີ້ບໍ່ຮູ້ວ່າຍ້ອນເຫດຜົນໃດ, ຄວາມສຳນຶກຂອງຜູ້ຄົນຈຶ່ງຍັງບໍ່ສາມາດປະຕິບັດໜ້າທີ່ເດີມຂອງພວກເຂົາໄດ້". ບໍ່ວ່າຜູ້ຄົນຮູ້ສຶກເຖິງຄວາມໂສກເສົ້າຂອງພຣະເຈົ້າ ຫຼື ບໍ່, ຖ້າພວກເຂົາສາມາດເຂົ້າຫາຄວາມຮັກຂອງພຣະເຈົ້າໂດຍບໍ່ຕ້ອງຝືນຄວາມສຳນຶກຂອງພວກເຂົາ, ນີ້ກໍຈະຖືວ່າສົມເຫດສົມຜົນ ແລະ ມີເຫດຜົນ. ຢ້ານຢ່າງດຽວກໍຄືພວກເຂົາບໍ່ເຕັມໃຈທີ່ຈະແບກຮັບໜ້າທີ່ເດີມຂອງຄວາມສຳນຶກ. ເຈົ້າຄິດວ່າແນວໃດ, ສິ່ງນີ້ຖືກຕ້ອງບໍ? ພຣະທຳເຫຼົ່ານີ້ຈະຊ່ວຍເຈົ້າບໍ? ຄວາມຫວັງຂອງເຮົາກໍຄື ພວກເຈົ້າຈະເປັນສິ່ງທີ່ມີຄວາມສຳນຶກ, ແທນທີ່ຈະເປັນຂີ້ເຫຍື້ອທີ່ບໍ່ມີຄວາມສຳນຶກ. ພວກເຈົ້າຄິດແນວໃດກ່ຽວກັບພຣະທຳເຫຼົ່ານີ້? ມີຜູ້ໃດຮູ້ສຶກເຖິງສິ່ງນີ້ບໍ? ການມີເຂັມປັກຢູ່ໃນຫົວໃຈຂອງພວກເຈົ້ານັ້ນບໍ່ເຈັບບໍ? ພຣະເຈົ້າແທງເຂັມໃສ່ຊາກສົບທີ່ໄຮ້ຄວາມຮູ້ສຶກບໍ? ພຣະເຈົ້າເຮັດຜິດພາດບໍ, ອາຍຸທີ່ເຖົ້າແກ່ໄດ້ເຮັດໃຫ້ສາຍຕາຂອງພຣະອົງມົວບໍ? ເຮົາເວົ້າວ່ານັ້ນເປັນໄປບໍ່ໄດ້! ຢ່າງໃດກໍຕາມ, ສິ່ງນີ້ຕ້ອງເປັນຄວາມຜິດຂອງມະນຸດ. ເປັນຫຍັງຈຶ່ງບໍ່ໄປໂຮງໝໍ ແລະ ກວດເບິ່ງ? ມະນຸດມີບັນຫາກັບຫົວໃຈຂອງເຂົາໂດຍບໍ່ຕ້ອງສົງໄສເລີຍ, ມັນຕ້ອງການໃສ່ "ອາໄຫຼ່" ໃໝ່, ພວກເຈົ້າຄິດວ່າແນວໃດ? ພວກເຈົ້າຈະເຮັດສິ່ງນັ້ນບໍ?

ພຣະເຈົ້າເວົ້າວ່າ "ເຮົາຫຼຽວເບິ່ງໃບໜ້າທີ່ຂີ້ຮ້າຍ ແລະ ສະພາບທີ່ຜິດປົກກະຕິຂອງພວກເຂົາແລ້ວເຮົາກໍຈາກມະນຸດໄປອີກຄັ້ງ. ພາຍໃຕ້ສະຖານະການດັ່ງກ່າວ, ຜູ້ຄົນຍັງບໍ່ເຂົ້າໃຈ ແລະ ເອົາສິ່ງທີ່ເຮົາໄດ້ປະຕິເສດພວກເຂົານັ້ນກັບຄືນອີກຄັ້ງ, ລໍຖ້າການກັບມາຂອງເຮົາ". ໃນລະຫວ່າງ "ຍຸກເຕັກໂນໂລຊີສະໄໝໃໝ່" ນີ້, ເປັນຫຍັງພຣະເຈົ້າຈຶ່ງຍັງເວົ້າກ່ຽວກັບງົວລາກກວຽນ? ເປັນຫຍັງຈຶ່ງເປັນແບບນີ້? ມັນເປັນຍ້ອນພຣະເຈົ້າມັກຈົ່ມວ່າບໍ? ພຣະເຈົ້າຂ້າເວລາ ຍ້ອນພຣະອົງບໍ່ມີຫຍັງເຮັດບໍ? ພຣະເຈົ້າເປັນຄືກັບມະນຸດບໍ ທີ່ປ່ອຍໃຫ້ເວລາຜ່ານໄປລ້າໆ ຫຼັງຈາກກິນອາຫານອີ່ມແລ້ວ? ມັນມີປະໂຫຍດຫຍັງທີ່ຈະກ່າວພຣະທຳເຫຼົ່ານີ້ຊໍ້າແລ້ວຊໍ້າອີກບໍ? ເຮົາໄດ້ເວົ້າວ່າ ຜູ້ຄົນເປັນຕາສັງເວດ ທີ່ເຈົ້າຕ້ອງຈັບດຶງຫູພວກເຂົາເພື່ອເຮັດໃຫ້ພວກເຂົາເຂົ້າໃຈ. ຫຼັງຈາກທີ່ໄດ້ກ່າວພຣະທຳຕໍ່ພວກເຂົາໃນມື້ນີ້, ພວກເຂົາກໍຈະລືມພຣະທຳເຫຼົ່ານັ້ນທັນທີໃນມື້ອື່ນ, ມັນເປັນຄືກັບພວກເຂົາເປັນໂລກຄວາມຈຳເສື່ອມ. ສະນັ້ນ ມັນບໍ່ແມ່ນໃນກໍລະນີທີ່ວ່າ ພຣະທຳບາງຂໍ້ບໍ່ໄດ້ຖືກກ່າວ, ແຕ່ເປັນຍ້ອນວ່າພຣະທຳເຫຼົ່ານັ້ນບໍ່ໄດ້ຖືກປະຕິບັດໂດຍຜູ້ຄົນ. ຖ້າບາງສິ່ງຖືກເວົ້າພຽງແຕ່ໜຶ່ງ ຫຼື ສອງຄັ້ງ, ຜູ້ຄົນກໍຍັງບໍ່ຮູ້, ມັນຕ້ອງຖືກກ່າວສາມຄັ້ງ, ນີ້ແມ່ນຈຳນວນໜ້ອຍທີ່ສຸດທີ່ຕ້ອງກ່າວ. ເຖິງກັບຍັງມີ "ຊາຍເຖົ້າ" ບາງຄົນທີ່ຕ້ອງໄດ້ເວົ້າ

ສິບຫາຊາວຄັ້ງ. ໃນລັກສະນະນີ້, ສິ່ງດຽວກັນແມ່ນຖືກເວົ້າຊໍ້າແລ້ວຊໍ້າອີກໃນລັກສະນະທີ່ແຕກຕ່າງກັນ, ເພື່ອເບິ່ງວ່າຜູ້ຄົນໄດ້ປ່ຽນແປງແລ້ວ ຫຼື ບໍ່. ພວກເຈົ້າເຮັດວຽກໃນລັກສະນະນີ້ແທ້ບໍ? ເຮົາບໍ່ຕ້ອງການຮ້າຍຜູ້ຄົນ, ແຕ່ພວກເຂົາທຸກຄົນກຳລັງຢອກຫຼິ້ນກັບພຣະເຈົ້າ; ພວກເຂົາທຸກຄົນຮູ້ທີ່ຈະຮັບອາຫານເສີມທາງໂພຊະນາການຫຼາຍຂຶ້ນ, ແຕ່ບໍ່ຮູ້ສຶກກັງວົນຍ້ອນພຣະເຈົ້າ ແລະ ນີ້ແມ່ນການຮັບໃຊ້ພຣະເຈົ້າບໍ? ບໍ່ຕ້ອງແປກໃຈເລີຍທີ່ພວກເຂົາໃຊ້ເວລາໝົດມື້ໂດຍບໍ່ຕ້ອງກັງວົນກ່ຽວກັບຫຍັງ, ຢູ່ລ້າໆ ແລະ ສະຫງົບງຽບ. ແຕ່ເຖິງຢ່າງນັ້ນກໍຕາມ ບາງຄົນກໍຍັງບໍ່ພໍໃຈ ແລະ ສ້າງຄວາມໂສກເສົ້າຂອງພວກເຂົາເອງ. ບາງເທື່ອ ເຮົາກໍຮຸນແຮງໄປໜ້ອຍໜຶ່ງ, ແຕ່ນີ້ແມ່ນສິ່ງທີ່ເປັນທີ່ຮູ້ຈັກກັນວ່າ ການເສົ້າໃຈກັບຕົນເອງເກີນໄປ! ແມ່ນພຣະເຈົ້າບໍທີ່ເຮັດໃຫ້ເຈົ້າຮູ້ສຶກໂສກເສົ້າ? ນີ້ບໍ່ແມ່ນເປັນກໍລະນີທີ່ນຳການທົນທຸກມາສູ່ຕົວເຈົ້າເອງບໍ? ບໍ່ມີຄວາມເມດຕາໃດໆຂອງພຣະເຈົ້າທີ່ມີຄຸນສົມບັດທີ່ຈະເປັນແຫຼ່ງຄວາມສຸກຂອງເຈົ້າບໍ? ຕັ້ງແຕ່ຕົ້ນຈົນຈົບ, ເຈົ້າບໍ່ໄດ້ໃສ່ໃຈໃນຄວາມປະສົງຂອງພຣະເຈົ້າ ແລະ ເຈົ້າກໍຄິດລົບ, ອ່ອນແອ ແລະ ເສົ້າໂສກ, ເປັນຫຍັງຈຶ່ງເປັນແບບນີ້? ມັນບໍ່ແມ່ນຄວາມປະສົງຂອງພຣະເຈົ້າບໍທີ່ຈະເຮັດໃຫ້ເຈົ້າດຳລົງຊີວິດໃນເນື້ອໜັງ? ພວກເຈົ້າບໍ່ຮູ້ຈັກຄວາມປະສົງຂອງພຣະເຈົ້າ, ບໍ່ສະບາຍຢູ່ພາຍໃນຫົວໃຈຂອງພວກເຈົ້າເອງ, ພວກເຈົ້າຈົ່ມ ແລະ ຕໍ່ວ່າ ແລະ ໃຊ້ເວລາໝົດມື້ກັບຄວາມທຸກ ແລະ ເນື້ອໜັງຂອງພວກເຈົ້າກໍທົນທຸກກັບຄວາມເຈັບປວດ ແລະ ທໍລະມານ, ນີ້ແມ່ນສິ່ງທີ່ພວກເຈົ້າສົມຄວນໄດ້ຮັບ! ພວກເຈົ້າຮຽກຮ້ອງໃຫ້ຄົນອື່ນສັນລະເສີນພຣະເຈົ້າທ່າມກາງການຂ້ຽນຕີ, ໃຫ້ພວກເຂົາພົ້ນຈາກການຂ້ຽນຕີ ແລະ ບໍ່ຖືກຢັບຢັ້ງໂດຍການຂ້ຽນຕີ, ແຕ່ພວກເຈົ້າກໍໄດ້ຕົກລົງສູ່ການຂ້ຽນຕີນັ້ນ ແລະ ບໍ່ສາມາດຫຼົບໜີໄດ້. ມັນໃຊ້ເວລາຫຼາຍປີເພື່ອຮຽນແບບ "ຈິດວິນຍານແຫ່ງການເສຍສະຫຼະຕົນເອງ" ຂອງໂດງ ຊຸນຣຸຍ. ເມື່ອເຈົ້າເທດສະໜາພຣະທຳ ແລະ ຄຳສັ່ງສອນ, ເຈົ້າບໍ່ຮູ້ສຶກອັບອາຍບໍ? ເຈົ້າຮູ້ຈັກຕົນເອງບໍ? ເຈົ້າໄດ້ປະວາງຕົນເອງແລ້ວບໍ? ເຈົ້າຮັກພຣະເຈົ້າແທ້ບໍ? ເຈົ້າໄດ້ປະວາງຄວາມຄາດຫວັງ ແລະ ໂຊກຊະຕາຂອງເຈົ້າແລ້ວບໍ? ບໍ່ຕ້ອງແປກໃຈເລີຍທີ່ພຣະເຈົ້າເວົ້າວ່າຜູ້ຄົນເປັນຄົນທີ່ມະຫັດສະຈັນ ແລະ ບໍ່ສາມາດຢັ່ງເຖິງໄດ້. ຜູ້ໃດຈະຄິດວ່າມີ "ຊັບສົມບັດ" ຫຼາຍຢ່າງຢູ່ພາຍໃນມະນຸດທີ່ບໍ່ໄດ້ຖືກຂຸດອອກມາເທື່ອ? ໃນປັດຈຸບັນ, ການເຫັນຊັບສົມບັດນັ້ນກໍພຽງພໍທີ່ຈະ "ເປີດສາຍຕາຂອງຄົນໆໜຶ່ງ", ຜູ້ຄົນແມ່ນ "ໜ້າອັດສະຈັນ" ຫຼາຍ! ມັນເປັນຄືກັບວ່າເຮົາເປັນເດັກນ້ອຍທີ່ບໍ່ສາມາດນັບໄດ້. ແມ່ນແຕ່ໃນປັດຈຸບັນ ເຮົາຍັງຄິດບໍ່ອອກວ່າມີເທົ່າໃດຄົນທີ່ຮັກພຣະເຈົ້າແທ້ໆ. ເຮົາບໍ່ສາມາດຈື່ຕົວເລກໄດ້ ແລະ ດ້ວຍເຫດນັ້ນ ຍ້ອນ "ຄວາມບໍ່ຊື່ສັດ" ຂອງເຮົາ, ເມື່ອເວລານັ້ນມາເຖິງທີ່ຈະລາຍງານຕໍ່ໜ້າພຣະເຈົ້າ, ເຮົາກໍມີແຕ່ມືເປົ່າສະເໝີ, ບໍ່ສາມາດເຮັດສິ່ງທີ່ເຮົາປາຖະໜາ, ເຮົາຕິດໜີ້ພຣະເຈົ້າຢູ່ສະເໝີ. ຜົນຕາມມາກໍຄື ເມື່ອເຮົາລາຍງານ, ເຮົາກໍຖືກພຣະເຈົ້າ "ລົງໂທດຕັກເຕືອນ" ຢູ່ສະເໝີ. ເຮົາບໍ່ຮູ້ວ່າເປັນຫຍັງຜູ້ຄົນຈຶ່ງໂຫດຮ້າຍຫຼາຍ, ເຮັດໃຫ້ເຮົາທົນທຸກຈາກສິ່ງນີ້ສະເໝີ. ຜູ້ຄົນໃຊ້ໂອກາດນີ້ເພື່ອເພີ່ມສຽງຫົວເຍາະເຍີ້ຍຂຶ້ນສອງເທົ່າ, ພວກເຂົາບໍ່ແມ່ນເພື່ອນຂອງເຮົາແທ້ໆ. ເມື່ອເຮົາມີບັນຫາ, ພວກເຂົາກໍບໍ່ໄດ້ຊ່ວຍຫຍັງເຮົາ, ແຕ່ຕັ້ງໃຈຫົວຂວັນເຮົາ, ພວກເຂົາບໍ່ມີຄວາມສຳນຶກແທ້ໆ!

# ບົດທີ 41

ພຣະເຈົ້າປະຕິບັດພາລະກິດໃນມະນຸດແນວໃດ? ພວກເຈົ້າຄິດສິ່ງນີ້ອອກບໍ? ມັນຊັດເຈນສຳລັບພວກເຈົ້າບໍ? ແລ້ວພຣະອົງປະຕິບັດພາລະກິດໃນຄຣິສຕະຈັກແນວໃດ? ມຸມມອງຂອງພວກເຈົ້າກ່ຽວກັບສິ່ງເຫຼົ່ານີ້ແມ່ນຫຍັງ? ພວກເຈົ້າເຄີຍພິຈາລະນາຄຳຖາມເຫຼົ່ານີ້ບໍ? ພຣະອົງປະສົງທີ່ຈະບັນລຸຫຍັງຜ່ານພາລະກິດຂອງພຣະອົງໃນຄຣິສຕະຈັກ? ສິ່ງເຫຼົ່ານີ້ທັງໝົດແມ່ນຊັດເຈນຕໍ່ພວກເຈົ້າບໍ? ຖ້າບໍ່ຊັດເຈນ, ທຸກສິ່ງທີ່ພວກເຈົ້າເຮັດກໍຈະບໍ່ມີປະໂຫຍດ ແລະ ເປົ່າວ່າງ! ພຣະທຳເຫຼົ່ານີ້ບໍ່ໄດ້ດົນໃຈພວກເຈົ້າບໍ? ມີພຽງແຕ່ຄວາມກ້າວໜ້າຢ່າງຫ້າວຫັນໂດຍບໍ່ມີການຖອຍຫຼັງກັບຢ່າງຊ້າໆ, ສິ່ງນີ້ຈະຕອບສະໜອງຄວາມປະສົງຂອງພຣະເຈົ້າໄດ້ບໍ? ການຮ່ວມມືແບບຕາບອດພຽງພໍແລ້ວບໍ? ພວກເຈົ້າຄວນເຮັດຫຍັງ ຖ້າພວກເຈົ້າບໍ່ມີຄວາມຊັດເຈນກ່ຽວກັບນິມິດ? ເປັນໄປໄດ້ບໍທີ່ຈະບໍ່ສະແຫວງຫາເພີ່ມເຕີມ? ພຣະເຈົ້າກ່າວວ່າ: "ຄັ້ງໜຶ່ງເຮົາເຄີຍໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍໃນທ່າມກາງມະນຸດ ແຕ່ພວກເຂົາບໍ່ສັງເກດເຫັນ ເຮົາຈຶ່ງໄດ້ໃຊ້ພຣະທຳຂອງເຮົາເພື່ອເປີດເຜີຍສິ່ງນັ້ນໃຫ້ແກ່ພວກເຂົາເທື່ອລະໜ້ອຍ. ເຖິງຢ່າງນັ້ນ ມະນຸດກໍຍັງບໍ່ສາມາດເຂົ້າໃຈພຣະທຳຂອງເຮົາ ແລະ ເຂົາຍັງບໍ່ຮູ້ຈຸດປະສົງຂອງແຜນການຂອງເຮົາ". ພຣະທຳເຫຼົ່ານີ້ໝາຍເຖິງຫຍັງ? ພວກເຈົ້າເຄີຍພິຈາລະນາຈຸດປະສົງນີ້ບໍ? ເຮົາສ້າງມັນໂດຍບໍ່ໄດ້ໄຕ່ຕອງ ແລະ ບໍ່ມີເປົ້າໝາຍແທ້ບໍ? ຖ້າເປັນເຊັ່ນນັ້ນ ແລ້ວຈຸດປະສົງຈະແມ່ນຫຍັງ? ຖ້າຈຸດປະສົງນີ້ບໍ່ຊັດເຈນ ແລະ ບໍ່ສາມາດເຂົ້າໃຈໄດ້ສຳລັບພວກເຈົ້າ ແລ້ວຈະສາມາດບັນລຸການຮ່ວມມືທີ່ແທ້ຈິງໄດ້ແນວໃດ? ພຣະເຈົ້າກ່າວວ່າ ການສະແຫວງຫາມະນຸດທຸກຄົນແມ່ນຢູ່ທະເລທີ່ບໍ່ມີຂອບເຂດ ແລະ ໃນທ່າມກາງທິດສະດີທີ່ຂຽນໃນຄຳເວົ້າທີ່ວ່າງເປົ່າ. ສຳລັບການສະແຫວງຫາຂອງພວກເຈົ້າ, ແມ່ນແຕ່ເຈົ້າກໍຍັງບໍ່ສາມາດອະທິບາຍໄດ້ວ່າ ພວກມັນຈັດຢູ່ໃນປະເພດໃດ. ພຣະເຈົ້າຕ້ອງການບັນລຸຫຍັງໃນມະນຸດ? ພວກເຈົ້າຄວນມີຄວາມຊັດເຈນກ່ຽວກັບສິ່ງເຫຼົ່ານີ້ທັງໝົດ. ມັນແມ່ນພຽງເພື່ອເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ອັບອາຍໃນທາງທີ່ບໍ່ດີເທົ່ານັ້ນບໍ? ຫຼັງຈາກໄດ້ເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ອັບອາຍແລ້ວ, ພຣະເຈົ້າຈະໄປໃນພູເຂົາໂດຍມືເປົ່າ ແລະ ດຳລົງຊີວິດຢູ່ໃນນັ້ນຢ່າງສັນໂດດແທ້ບໍ? ແລ້ວພຣະເຈົ້າຕ້ອງການຫຍັງ? ພຣະອົງຕ້ອງການຫົວໃຈຂອງມະນຸດແທ້ບໍ? ຫຼື ພຣະອົງຕ້ອງການຊີວິດຂອງພວກເຂົາ? ຫຼື ຄວາມຮັ່ງມີ ແລະ ຊັບສິນຂອງພວກເຂົາ? ສິ່ງເຫຼົ່ານີ້ຈະມີປະໂຫຍດຫຍັງ? ສິ່ງເຫຼົ່ານີ້ບໍ່ມີປະໂຫຍດສຳລັບພຣະເຈົ້າ. ພຣະເຈົ້າປະຕິບັດພາລະກິດຢ່າງຫຼວງຫຼາຍໃນມະນຸດພຽງເພື່ອໃຊ້ເຂົາເປັນຫຼັກຖານໃນການເອົາໄຊຊະນະເໜືອຊາຕານ ແລະ ເພື່ອວ່າພຣະອົງຈະໄດ້ສະແດງ "ຄວາມສາມາດ" ຂອງພຣະອົງເທົ່ານັ້ນບໍ? ແລ້ວພຣະເຈົ້າຈະບໍ່ເບິ່ງຄືວ່າຂ້ອນຂ້າງ "ເລັກນ້ອຍ" ບໍ? ພຣະເຈົ້າເປັນພຣະເຈົ້າປະເພດນັ້ນບໍ? ເປັນອົງທີ່ຄືກັນກັບເດັກນ້ອຍ ທີ່ລາກຜູ້ໃຫຍ່ໃຫ້ໄປຕີກັບຜູ້ອື່ນບໍ? ແລ້ວຈະມີປະໂຫຍດຫຍັງໃນສິ່ງນັ້ນ? ມະນຸດໃຊ້ແນວຄິດຂອງຕົວເອງເພື່ອປະເມີນພຣະເຈົ້າສະເໝີ. ຄັ້ງໜຶ່ງພຣະເຈົ້າເຄີຍກ່າວວ່າ: "ມີສີ່ລະດູໃນໜຶ່ງປີ ແລະ ສາມເດືອນໃນແຕ່ລະລະດູ". ມະນຸດຟັງພຣະທຳເຫຼົ່ານີ້, ຈົດຈຳສິ່ງເຫຼົ່ານັ້ນເຂົ້າໃນຄວາມຊົງຈຳ ແລະ ເວົ້າຕະຫຼອດວ່າ ມີສາມເດືອນໃນໜຶ່ງລະດູ ແລະ

ສີ່ລະດູໃນໜຶ່ງປີ. ເມື່ອພຣະເຈົ້າຖາມວ່າ "ມີຈັກລະດູໃນໜຶ່ງປີ? ມີຈັກເດືອນໃນໜຶ່ງປີ?" ມະນຸດກໍຕອບເປັນສຽງດຽວກັນວ່າ "ສີ່ລະດູ, ສາມເດືອນ". ມະນຸດພະຍາຍາມກຳນົດພຣະເຈົ້າດ້ວຍທິທີທາງແຫ່ງກົດເກນຕະຫຼອດ ແລະ ໃນຕອນນີ້ ເມື່ອໄດ້ເຂົ້າສູ່ຍຸກຂອງ "ສາມລະດູໃນໜຶ່ງປີ, ສີ່ເດືອນໃນໜຶ່ງລະດູ" ມະນຸດກໍຍັງບໍ່ຮູ້ ຄືກັບວ່າເຂົາຕາບອດ ໂດຍຊອກຫາກົດເກນໃນທຸກໆສິ່ງ. ໃນປັດຈຸບັນ, ມະນຸດພະຍາຍາມໃຊ້ "ກົດເກນ" ຂອງພວກເຂົາກັບພຣະເຈົ້າ! ພວກເຂົາຈັ່ງແມ່ນຕາບອດແທ້ໆ! ພວກເຂົາບໍ່ເຫັນບໍວ່າຕອນນີ້ບໍ່ມີ "ລະດູໜາວ", ມີແຕ່ "ລະດູໃບໄມ້ປົ່ງ, ລະດູຮ້ອນ ແລະ ລະດູໃບໄມ້ຫຼົ່ນ"? ມະນຸດຈັ່ງແມ່ນໂງ່ແທ້ໆ! ເມື່ອໄດ້ມາຜ່ານສິ່ງນີ້ ແລ້ວຍັງບໍ່ຮູ້ວິທີໃນການຮູ້ຈັກພຣະເຈົ້າ ຄືກັບຄົນໃນຊຸມປີ 1920 ທີ່ຄິດວ່າ ການຂົນສົ່ງບໍ່ສະດວກສະບາຍ ແລະ ທຸກຄົນຄວນຍ່າງ ຫຼື ຈູງລານ້ອຍ ຫຼື ຜູ້ທີ່ຄິດວ່າ ຜູ້ຄົນຄວນໃຊ້ນໍ້າມັນຕະກຽງ ຫຼື ຜູ້ທີ່ເຊື່ອວ່າ ແນວທາງຊີວິດແບບບູຮານແມ່ນດີກວ່າ. ສິ່ງເຫຼົ່ານີ້ທັງໝົດບໍ່ແມ່ນແນວຄິດທີ່ມີໃນສະໝອງຂອງມະນຸດບໍ? ເປັນຫຍັງພວກເຂົາຍັງເວົ້າກ່ຽວກັບຄວາມເມດຕາ ແລະ ຄວາມກະລຸນາໃນປັດຈຸບັນ? ສິ່ງນີ້ມີປະໂຫຍດຫຍັງ? ມັນຄ້າຍຄືກັບແມ່ເຖົ້າຄົນໜຶ່ງທີ່ຈົ່ມກ່ຽວກັບອະດີດຂອງລາວ. ຄຳເວົ້າເຫຼົ່ານີ້ມີປະໂຫຍດຫຍັງບໍ່? ຢ່າງໃດກໍຕາມ, ປັດຈຸບັນກໍຄືປັດຈຸບັນ; ເວລາສາມາດຫວນຄືນໄປເມື່ອ 20 ຫຼື 30 ປີຫຼັງໄດ້ບໍ? ທຸກຄົນໄປຕາມຄື້ນ; ເປັນຫຍັງພວກເຂົາຈຶ່ງລັງເລທີ່ຈະຍອມຮັບສິ່ງນີ້? ໃນຍຸກແຫ່ງການຂໍ້ມູນຕີປັດຈຸບັນ, ການເວົ້າກ່ຽວກັບຄວາມເມດຕາ ແລະ ຄວາມກະລຸນາແມ່ນມີປະໂຫຍດຫຍັງ? ຄວາມເມດຕາ ແລະ ຄວາມກະລຸນາ, ພຣະເຈົ້າມີແຕ່ສິ່ງນີ້ບໍ? ໃນຍຸກແຫ່ງ "ແປ້ງ ແລະ ເຂົ້າ" ນີ້, ເປັນຫຍັງຜູ້ຄົນຈຶ່ງສືບຕໍ່ກິນ "ໝາກເດີຍ ແລະ ຜັກປ່າ"? ສິ່ງທີ່ພຣະເຈົ້າບໍ່ເຕັມໃຈເຮັດ, ມະນຸດກໍບັງຄັບໃຫ້ພຣະອົງເຮັດ. ຖ້າພຣະອົງຕໍ່ຕ້ານ, ພຣະອົງກໍຖືກເອີ້ນວ່າເປັນ "ຜູ້ຕໍ່ຕ້ານການປະຕິວັດ" ແລະ ເຖິງວ່າຈະມີການເວົ້າຄັ້ງໜຶ່ງມາແລ້ວ ແລະ ມີການເວົ້າອີກວ່າ ພຣະເຈົ້າບໍ່ແມ່ນພຣະເຈົ້າທີ່ມີຄວາມເມດຕາ ຫຼື ຄວາມຮັກໂດຍກຳເນີດ ແຕ່ມີຜູ້ໃດຟັງແດ່? ມະນຸດຈັ່ງແມ່ນບໍ່ສົມເຫດສົມຜົນຫຼາຍ. ມັນເປັນຄືກັບວ່າ ພຣະທຳຂອງພຣະເຈົ້າບໍ່ມີຜົນຫຍັງເລີຍ. ມະນຸດເບິ່ງພຣະທຳຂອງເຮົາເປັນແສງສະຫວ່າງທີ່ແຕກຕ່າງສະເໝີ. ພຣະເຈົ້າແມ່ນຖືກມະນຸດຂົ່ມເຫັງຕະຫຼອດມາ ຄືກັບວ່າ ໄດ້ມີການກ່າວຫາຄວາມຜິດທາງອາຍາໃສ່ຜູ້ຄົນບໍລິສຸດໂດຍທີ່ບໍ່ມີຫຼັກຖານ. ແລ້ວມີຜູ້ໃດທີ່ສາມາດຄິດຄືກັນກັບພຣະເຈົ້າແດ່? ພວກເຈົ້າເຕັມໃຈດຳລົງຊີວິດໃນຄວາມເມດຕາ ແລະ ຄວາມກະລຸນາຂອງພຣະເຈົ້າຕະຫຼອດ ແລ້ວມີຫຍັງໃຫ້ພຣະເຈົ້າເຮັດ ນອກຈາກອົດທົນຕໍ່ການດູຖູກຂອງມະນຸດ? ຢ່າງໃດກໍຕາມ, ເຮົາຫວັງວ່າ ພວກເຈົ້າຈະສຳຫຼວດຢ່າງລະອຽດເຖິງວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ ກ່ອນທີ່ຈະຖຽງກັບພຣະເຈົ້າ. ແຕ່ເຮົາແນະນຳໃຫ້ເຈົ້າເບິ່ງເຂົ້າໄປໃນຄວາມໝາຍເດີມຂອງພຣະທຳຂອງພຣະເຈົ້າຢ່າງລະມັດລະວັງ. ຢ່າຄິດວ່າ ຕົວເອງສະຫຼາດໃນການເຊື່ອວ່າ ພຣະທຳຂອງພຣະເຈົ້າໄດ້ "ຈາງລົງ". ບໍ່ຈຳເປັນໃນສິ່ງນັ້ນເລີຍ! ຜູ້ໃດສາມາດບອກວ່າ ພຣະທຳຂອງພຣະເຈົ້າ "ຈາງລົງ" ສໍ່າໃດບໍ? ນອກຈາກວ່າ ພຣະເຈົ້າຈະກ່າວໂດຍກົງ ຫຼື ລະບຸຢ່າງຊັດເຈນ. ຈົ່ງຢ່າຄິດວ່າ ຕົວເອງສູງສົ່ງ. ຖ້າພວກເຈົ້າສາມາດເຫັນເສັ້ນທາງແຫ່ງການປະຕິບັດຈາກພຣະທຳຂອງພຣະເຈົ້າ, ພວກເຈົ້າກໍຈະຕອບສະໜອງຄວາມຕ້ອງການຂອງພຣະອົງ. ພວກເຈົ້າປາຖະໜາ

ຢາກເຫັນສິ່ງໃດອີກ? ພຣະເຈົ້າກ່າວວ່າ "ເຮົາຈະຢຸດສະແດງຄວາມເມດຕາຕໍ່ຄວາມອ່ອນແອຂອງມະນຸດ". ຖ້າພວກເຈົ້າບໍ່ສາມາດເຂົ້າໃຈແມ່ນແຕ່ຄວາມໝາຍຂອງປະໂຫຍກທີ່ຈະແຈ້ງ ແລະ ທຳມະດານີ້ ແລ້ວການສຶກສາ ແລະ ການກວດສອບເພີ່ມເຕີມຈະມີຄວາມໝາຍຫຍັງ? ຖ້າບໍ່ມີຄວາມຮູ້ພື້ນຖານທີ່ສຸດກ່ຽວກັບກົນຈັກ ແລ້ວພວກເຈົ້າຈະມີຄຸນສົມບັດໃນການສ້າງຈະຫຼວດໄດ້ບໍ? ຄົນດັ່ງກ່າວບໍ່ແມ່ນຄົນທີ່ໂອ້ອວດຢ່າງບໍ່ມີປະໂຫຍດບໍ? ມະນຸດບໍ່ມີຊັບພະຍາກອນໃນການເຮັດພາລະກິດຂອງພຣະເຈົ້າ; ແມ່ນພຣະເຈົ້າເອງທີ່ຍົກສູງພວກເຂົາ. ພຽງແຕ່ຮັບໃຊ້ພຣະອົງໂດຍບໍ່ຮູ້ວ່າ ພຣະອົງຮັກຫຍັງ ຫຼື ກຽດຊັງຫຍັງ, ນີ້ບໍ່ແມ່ນສູດແຫ່ງຄວາມພິນາດບໍ? ມະນຸດບໍ່ຮູ້ຈັກຕົວເອງ ແຕ່ຄິດວ່າ ຕົວເອງພິເສດຫຼາຍ. ພວກເຂົາຄິດວ່າພວກເຂົາແມ່ນໃຜ! ພວກເຂົາບໍ່ຮູ້ວ່າ ສິ່ງໃດດີ ຫຼື ສິ່ງໃດບໍ່ດີ. ຈົ່ງຄິດຄືນຫຼັງເຖິງອະດີດ ແລະ ເບິ່ງໄປທາງໜ້າເຖິງອະນາຄົດ. ສິ່ງນັ້ນຟັງເບິ່ງຄືແນວໃດ? ຫຼັງຈາກນັ້ນກໍໃຫ້ມາຮູ້ຈັກຕົວເຈົ້າເອງ.

ພຣະເຈົ້າໄດ້ເປີດເຜີຍຫຼາຍສິ່ງກ່ຽວກັບເຈດຕະນາ ແລະ ເປົ້າໝາຍຂອງມະນຸດ. ພຣະອົງກ່າວວ່າ "ພຽງເມື່ອນັ້ນ ເຮົາຈຶ່ງເຫັນເຈດຕະນາ ແລະ ເປົ້າໝາຍຂອງມະນຸດຢ່າງຊັດເຈນ. ເຮົາເສົ້າໃຈພາຍໃນກ້ອນເມກ: ເປັນຫຍັງມະນຸດຈຶ່ງເຮັດເພື່ອຕົວເອງຕະຫຼອດ? ການຂ້ຽນຕີຂອງເຮົາບໍ່ໄດ້ມີເຈດຕະນາເຮັດໃຫ້ພວກເຂົາສົມບູນບໍ? ເຮົາຈິງໃຈໂຈມຕີທັດສະນະຄະຕິທີ່ດີຂອງພວກເຂົາບໍ?" ພວກເຈົ້າໄດ້ຮຽນຮູ້ຫຼາຍສໍ່າໃດກ່ຽວກັບຕົວເອງຈາກພຣະທຳເຫຼົ່ານີ້? ເຈດຕະນາ ແລະ ເປົ້າໝາຍຂອງມະນຸດໄດ້ຫາຍໄປຢ່າງແທ້ຈິງບໍ? ພວກເຈົ້າໄດ້ເບິ່ງເຂົ້າໃນສິ່ງນີ້ດ້ວຍຕົວເອງບໍ? ພວກເຈົ້າອາດຈະມາຢູ່ຕໍ່ໜ້າພຣະເຈົ້າ ແລະ ພະຍາຍາມເຂົ້າໃຈສິ່ງນີ້: ພາລະກິດແຫ່ງການຂ້ຽນຕີທີ່ພຣະເຈົ້າໄດ້ປະຕິບັດໃນຕົວພວກເຈົ້າແມ່ນໄດ້ບັນລຸຜົນຫຍັງ? ພວກເຈົ້າໄດ້ສະຫຼຸບສິ່ງນີ້ແລ້ວບໍ? ບາງເທື່ອຜົນຮັບແມ່ນພຽງໜ້ອຍດຽວ; ບໍ່ດັ່ງນັ້ນ, ພວກເຈົ້າກໍຈະເວົ້າກ່ຽວກັບມັນດ້ວຍຄຳສັບທີ່ຫຼູຫຼາໄປແລ້ວ. ພຣະເຈົ້າໃຫ້ພວກເຈົ້າບັນລຸຫຍັງ? ຈາກບັນດາພຣະທຳທັງຫຼາຍທີ່ໄດ້ກ່າວກັບພວກເຈົ້າ, ມີຈັກຂໍ້ທີ່ໄດ້ບັນລຸຜົນ ແລະ ມີຈັກຂໍ້ທີ່ບໍ່ມີຜົນຫຍັງ? ໃນສາຍຕາຂອງພຣະເຈົ້າ, ມີພຽງພຣະທຳເລັກນ້ອຍຂອງພຣະອົງເທົ່ານັ້ນທີ່ໄດ້ບັນລຸຜົນ; ນີ້ກໍຍ້ອນວ່າ ມະນຸດບໍ່ເຄີຍສາມາດແປຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງພຣະອົງ ແລະ ສິ່ງທີ່ເຂົາຍອມຮັບເອົາຄືສຽງສະທ້ອນຂອງພຣະທຳທີ່ສະທ້ອນຈາກກຳແພງ. ນີ້ແມ່ນວິທີທາງໃນການຮູ້ຈັກຄວາມປະສົງຂອງພຣະເຈົ້າບໍ? ໃນອະນາຄົດອັນໃກ້ນີ້, ພຣະເຈົ້າຈະມີພາລະກິດໃຫ້ມະນຸດເຮັດຫຼາຍຂຶ້ນ; ມະນຸດຈະສາມາດເຮັດພາລະກິດນັ້ນໃຫ້ສຳເລັດດ້ວຍວຸດທິພາວະນ້ອຍໆທີ່ເຂົາມີໃນຕອນນີ້ບໍ? ຖ້າບໍ່ອອກນອກເສັ້ນທາງ ກໍຈະເຮັດຜິດພາດ ຫຼື ບໍ່ສະນັ້ນ ກໍຈະອວດດີ. ເບິ່ງຄືວ່າ ສິ່ງດັ່ງກ່າວແມ່ນທຳມະຊາດຂອງມະນຸດ. ເຮົາເຫັນສິ່ງນີ້ເປັນສິ່ງທີ່ເຂົ້າໃຈຍາກ: ເຖິງແມ່ນວ່າພຣະເຈົ້າຈະໄດ້ກ່າວໄວ້ຢ່າງຫຼວງຫຼາຍ ແຕ່ເປັນຫຍັງມະນຸດຈຶ່ງບໍ່ໃສ່ໃຈສິ່ງເຫຼົ່ານັ້ນ? ເປັນໄປໄດ້ບໍ່ວ່າພຣະເຈົ້າຈະເວົ້າຫຼິ້ນກັບມະນຸດ ແລະ ບໍ່ຊອກຫາຜົນໄດ້ຮັບຫຍັງເລີຍ? ຫຼື ເປັນການເຮັດໃຫ້ມະນຸດຫຼິ້ນລະຄອນທີ່ມີຊື່ວ່າ "ຄວາມມ່ວນຊື່ນ, ຄວາມໂມໂຫ, ຄວາມໂສກເສົ້າ ແລະ ຄວາມສຸກ" ບໍ? ເປັນການເຮັດໃຫ້ມະນຸດມີຄວາມສຸກໃນຊ່ວງໄລຍະໜຶ່ງ ແລ້ວຕໍ່ມາກໍເຮັດໃຫ້ເຂົາຮ້ອງໄຫ້. ແລ້ວຫຼັງຈາກນັ້ນ ເມື່ອມະນຸດລົງຈາກເວທີກໍຖືກປ່ອຍໃຫ້ເຂົາເຮັດຕາມໃຈບໍ? ຜົນຈາກສິ່ງນີ້ຈະເປັນແນວໃດ? "ເປັນຫຍັງການຮຽກຮ້ອງ

ທີ່ເຮົາມີຕໍ່ມະນຸດຈຶ່ງບໍ່ມີຜົນຕະຫຼອດ? ເປັນໄປໄດ້ບໍວ່າ ເຮົາກຳລັງຂໍໃຫ້ໝາປີນຕົ້ນໄມ້? ເຮົາກຳລັງສ້າງຄວາມວຸ້ນວາຍກັບສິ່ງທີ່ບໍ່ມີຫຍັງບໍ?" ພຣະທຳທັງໝົດຂອງພຣະເຈົ້າແມ່ນແນໃສ່ສະພາບຕົວຈິງຂອງມະນຸດ. ມັນຈະບໍ່ເສຍຫາຍຫຍັງທີ່ຈະເບິ່ງຈາກພາຍໃນມະນຸດທຸກຄົນ ເພື່ອເບິ່ງວ່າ ຜູ້ໃດກຳລັງດຳລົງຊີວິດພາຍໃນພຣະທຳຂອງພຣະເຈົ້າ. "ແມ່ນແຕ່ໃນຕອນນີ້, ດິນສ່ວນໃຫຍ່ກໍຍັງສືບຕໍ່ປ່ຽນແປງ. ໃນມື້ໃດມື້ໜຶ່ງ, ຖ້າດິນປ່ຽນແປງເປັນປະເພດອື່ນຢ່າງແທ້ຈິງ, ເຮົາກໍຈະປະຖິ້ມມັນໄວ້ທາງຂ້າງດ້ວຍການດີດມືຂອງເຮົາ. ນີ້ບໍ່ແມ່ນພາລະກິດຂອງເຮົາໃນຍຸກປັດຈຸບັນຢ່າງແທ້ຈິງບໍ?" ແທ້ຈິງແລ້ວ ແມ່ນແຕ່ໃນຕອນນີ້ ພຣະເຈົ້າກຳລັງປະຕິບັດພາລະກິດນີ້; ແຕ່ຢ່າງໃດກໍຕາມ, ສິ່ງທີ່ພຣະອົງກ່າວກ່ຽວກັບ "ການປະຖິ້ມໄວ້ທາງຂ້າງດ້ວຍການດີດມືຂອງເຮົາ" ແມ່ນໝາຍເຖິງອະນາຄົດ ຍ້ອນວ່າທຸກສິ່ງຕ້ອງມີຂະບວນການ. ພາລະກິດໃນປັດຈຸບັນຂອງພຣະເຈົ້າມີແນວໂນ້ມໄປທາງນີ້. ສິ່ງນີ້ບໍ່ຊັດເຈນສຳລັບພວກເຈົ້າບໍ? ໃນເຈດຕະນາຂອງມະນຸດແມ່ນມີຂໍ້ບົກຜ່ອງ ແລະ ວິນຍານທີ່ສົກກະປົກກໍໄດ້ສວຍໂອກາດນີ້ເພື່ອເຂົ້າໄປສະຖິດຢູ່ຂ້າງໃນ. ໃນເວລານີ້, "ດິນ ແດນປ່ຽນແປງເປັນປະເພດອື່ນຢ່າງແທ້ຈິງ". ຜູ້ຄົນກໍຈະປະສົບກັບການປ່ຽນແປງທາງດ້ານຄຸນນະພາບ ເຖິງຈະບໍ່ແມ່ນການປ່ຽນແປງໃນທາດແທ້ຂອງພວກເຂົາ ເນື່ອງຈາກວ່າ ຈະມີສິ່ງອື່ນຢູ່ເທິງແຜ່ນດິນໂລກທີ່ໄດ້ພັດທະນາຂຶ້ນ. ເວົ້າອີກແບບໜຶ່ງກໍຄື ແຜ່ນດິນໂລກເດີມແລ້ວແມ່ນດ້ອຍກວ່າ ແຕ່ຫຼັງຈາກໄດ້ມີການປັບປຸງ ມັນກໍອາດຈະໃຊ້ໄດ້. ຢ່າງໃດກໍຕາມ, ຫຼັງຈາກໄດ້ມີການນຳໃຊ້ມັນໄລຍະໜຶ່ງ ແລະ ບໍ່ໄດ້ມີການນຳໃຊ້ອີກຕໍ່ໄປ ມັນກໍຈະປ່ຽນກັບຄືນສູ່ຮູບຮ່າງເກົ່າຂອງມັນເທື່ອລະໜ້ອຍ. ນີ້ແມ່ນການສະຫຼຸບຂັ້ນຕອນຕໍ່ໄປໃນພາລະກິດຂອງພຣະເຈົ້າ. ພາລະກິດໃນອະນາຄົດຈະຊັບຊ້ອນກວ່າເກົ່າ ຍ້ອນວ່າມັນຈະເປັນເວລາທີ່ທຸກສິ່ງຈະຖືກແຍກອອກຕາມປະເພດຂອງມັນ. ໃນບ່ອນທີ່ພົບປະກັນ, ເມື່ອທຸກສິ່ງສິ້ນສຸດລົງ ກໍຈະມີຄວາມວຸ້ນວາຍຢ່າງຫຼີກເວັ້ນບໍ່ໄດ້ ແລະ ມະນຸດກໍຈະບໍ່ມີຄວາມເຊື່ອໝັ້ນຢ່າງແຮງກ້າ. ມັນເປັນດັ່ງພຣະເຈົ້າທີ່ກ່າວໄວ້ວ່າ: "ມະນຸດລ້ວນແລ້ວແຕ່ເປັນນັກສະແດງທີ່ຮ້ອງເພງໄປຕາມທຳນອງເພງໃດກໍຕາມທີ່ຫຼິ້ນຢູ່". ມະນຸດມີຄວາມສາມາດໃນການຮ້ອງເພງໄປກັບທຳນອງເພງໃດກໍຕາມທີ່ຫຼິ້ນຢູ່, ສະນັ້ນ ພຣະເຈົ້າຈຶ່ງຖືໂອກາດເອົາຂໍ້ບົກຜ່ອງນີ້ໃນຕົວພວກເຂົາເພື່ອດຳເນີນຂັ້ນຕອນຕໍ່ໄປໃນພາລະກິດຂອງພຣະອົງ ເຊິ່ງດ້ວຍເຫດນັ້ນກໍເປັນການເຮັດໃຫ້ມະນຸດທຸກຄົນມີຄວາມສາມາດແກ້ໄຂຂໍ້ບົກຜ່ອງນີ້. ມັນເປັນຍ້ອນວ່າ ພວກເຂົາບໍ່ມີວຸດທິພາວະທີ່ແທ້ຈິງ ມະນຸດຈຶ່ງເປັນຄືກັບຫຍ້າທີ່ເຕີບໃຫຍ່ຢູ່ເທິງກຳແພງ. ຖ້າພວກເຂົາໄດ້ຮັບວຸດທິພາວະ, ພວກເຂົາຈະເປັນຕົ້ນໄມ້ທີ່ໃຫຍ່ສູງທີ່ແຕະທ້ອງຟ້າ. ພຣະເຈົ້າມີເຈດຕະນາໃຊ້ສ່ວນໜຶ່ງຈາກພາລະກິດຂອງວິນຍານຊົ່ວຮ້າຍ ເພື່ອເຮັດໃຫ້ສ່ວນໃດໜຶ່ງຂອງມະນຸດສົມບູນ, ເຮັດໃຫ້ຜູ້ຄົນເຫຼົ່ານີ້ສາມາດເບິ່ງເຫັນຢ່າງສົມບູນເຖິງຄວາມຊົ່ວຊ້າຂອງມານຮ້າຍ ແລະ ເພື່ອໃຫ້ມະນຸດທຸກຄົນສາມາດຮູ້ຈັກ "ບັນພະບຸລຸດ" ຂອງພວກເຂົາຢ່າງແທ້ຈິງ. ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈຶ່ງຈະສາມາດເປັນອິດສະຫຼະຢ່າງສົມບູນ ໂດຍບໍ່ພຽງແຕ່ຈະປະຖິ້ມລູກຫຼານຂອງມານຮ້າຍ ແຕ່ເຖິງກັບຈະປະຖິ້ມບັນພະບຸລຸດຂອງມານຮ້າຍນຳ. ນີ້ແມ່ນຈຸດປະສົງທີ່ແທ້ຈິງຂອງພຣະເຈົ້າໃນການເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ຢ່າງສິ້ນເຊີງ ເພື່ອເຮັດໃຫ້ມະນຸດທຸກຄົນຮູ້ຈັກຮູບຮ່າງທີ່ແທ້ຈິງຂອງມັງກອນແດງທີ່

ຍິ່ງໃຫຍ່, ເພື່ອຈີກໜ້າກາກຂອງມັນອອກທັງໝົດ ແລະ ເພື່ອເບິ່ງຮູບຮ່າງທີ່ແທ້ຈິງຂອງມັນ. ນີ້ແມ່ນສິ່ງທີ່ພຣະເຈົ້າຕ້ອງການຈະບັນລຸ, ມັນຄືເປົ້າໝາຍສຸດທ້າຍຂອງພາລະກິດທັງໝົດທີ່ພຣະອົງໄດ້ປະຕິບັດຢູ່ເທິງແຜ່ນດິນໂລກ ແລະ ມັນແມ່ນສິ່ງທີ່ພຣະອົງຕັ້ງເປົ້າໝາຍທີ່ຈະບັນລຸໃນມະນຸດຊາດທຸກຄົນ. ນີ້ເອີ້ນວ່າການລະດົມທຸກສິ່ງ ເພື່ອຮັບໃຊ້ຈຸດປະສົງຂອງພຣະເຈົ້າ.

ສ່ວນພາລະກິດໃນອະນາຄົດ, ພວກເຈົ້າມີຄວາມຊັດເຈນກ່ຽວກັບວິທີທີ່ພາລະກິດນັ້ນຈະຖືກປະຕິບັດບໍ? ຕ້ອງມີຄວາມເຂົ້າໃຈຕໍ່ສິ່ງເຫຼົ່ານີ້. ຍົກຕົວຢ່າງ: ເປັນຫຍັງພຣະເຈົ້າກ່າວວ່າ ມະນຸດບໍ່ເອົາໃຈໃສ່ໃນສິ່ງທີ່ພວກເຂົາຄວນເຮັດ? ເປັນຫຍັງພຣະອົງຈຶ່ງກ່າວວ່າ ມີຫຼາຍຄົນທີ່ບໍ່ສາມາດເຮັດສຳເລັດ "ວຽກບ້ານ" ທີ່ພຣະອົງໄດ້ມອບໝາຍໃຫ້ພວກເຂົາ? ສິ່ງເຫຼົ່ານີ້ຈະສາມາດບັນລຸໄດ້ແນວໃດ? ພວກເຈົ້າເຄີຍພິຈາລະນາຄຳຖາມເຫຼົ່ານີ້ບໍ? ສິ່ງເຫຼົ່ານີ້ໄດ້ກາຍເປັນຫົວຂໍ້ກ່ຽວກັບການສົນທະນາສຳລັບເຈົ້າແລ້ວບໍ? ໃນຂັ້ນຕອນນີ້ຂອງພາລະກິດ, ມະນຸດຕ້ອງຖືກເຮັດໃຫ້ເຂົ້າໃຈກ່ຽວກັບເຈດຕະນາໃນປັດຈຸບັນຂອງພຣະເຈົ້າ. ຫຼັງຈາກສິ່ງນີ້ໄດ້ຖືກບັນລຸ ແລ້ວສິ່ງອື່ນໆກໍຈຶ່ງຈະສາມາດຍົກຂຶ້ນມາສົນທະນາໄດ້. ນີ້ບໍ່ແມ່ນວິທີທີ່ດີເລີດໃນການເຮັດສິ່ງຕ່າງໆບໍ? ສິ່ງທີ່ພຣະເຈົ້າປາຖະໜາຈະບັນລຸໃນມະນຸດແມ່ນຈຳເປັນຕ້ອງໄດ້ຖືກອະທິບາຍຢ່າງຊັດເຈນ, ບໍ່ສະນັ້ນ ທຸກຢ່າງຈະບໍ່ມີປະໂຫຍດຫຍັງ ແລະ ມະນຸດຈະບໍ່ສາມາດເຂົ້າເຖິງສິ່ງນີ້ໄດ້ ແລ້ວແຮງໄກທີ່ຈະບັນລຸມັນໄດ້ ແລະ ທຸກຢ່າງກໍຈະເປັນການເວົ້າທີ່ວ່າງເປົ່າ. ສຳລັບສິ່ງທີ່ພຣະເຈົ້າໄດ້ກ່າວໃນປັດຈຸບັນ, ພວກເຈົ້າໄດ້ພົບເຫັນເສັ້ນທາງໃນການນຳສິ່ງນີ້ໄປປະຕິບັດແລ້ວບໍ? ທຸກຄົນມີຄວາມຮູ້ສຶກຢ້ານກ່ຽວກັບພຣະທຳຂອງພຣະເຈົ້າ. ພວກເຂົາບໍ່ສາມາດເຂົ້າໃຈພຣະທຳເຫຼົ່ານີ້ຢ່າງຄົບຖ້ວນ ແຕ່ພວກເຂົາກໍຍັງຢ້ານທີ່ຈະລ່ວງເກີນພຣະເຈົ້າ. ຈົນຮອດຕອນນີ້, ໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແມ່ນມີຈັກວິທີທາງທີ່ຖືກຄົ້ນພົບແລ້ວ? ຄົນສ່ວນໃຫຍ່ບໍ່ຮູ້ຈັກວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ແລ້ວຈະສາມາດແກ້ໄຂສິ່ງນີ້ໄດ້ແນວໃດ? ພວກເຈົ້າພົບວິທີທາງໃນການກິນ ແລະ ດື່ມພາຍໃນພຣະທຳໃນປັດຈຸບັນນີ້ບໍ? ເຈົ້າເປັນແນວໃດໃນຕອນນີ້ໃນການພະຍາຍາມຮ່ວມມືເຮັດສິ່ງດັ່ງກ່າວ? ເມື່ອພວກເຈົ້າທຸກຄົນໄດ້ກິນ ແລະ ດື່ມພຣະທຳ ພວກເຈົ້າຈະສົນທະນາເຖິງການໄຕ່ຕອງຂອງພວກເຈົ້າກ່ຽວກັບສິ່ງເຫຼົ່ານັ້ນຜ່ານວິທີການໃດ? ນີ້ບໍ່ແມ່ນສິ່ງທີ່ມະນຸດຄວນເຮັດບໍ? ຄົນໃດໜຶ່ງຈະສັ່ງຢາໃຫ້ຖືກຕ້ອງສຳລັບການເຈັບເປັນດ້ວຍວິທີໃດ? ພວກເຈົ້າຍັງຈຳເປັນຕ້ອງໃຫ້ພຣະເຈົ້າກ່າວພຣະທຳໂດຍກົງບໍ? ສິ່ງນີ້ຈຳເປັນບໍ? ບັນຫາທີ່ກ່າວມາກ່ອນໜ້ານັ້ນຈະຖືກກຳຈັດຢ່າງສົມບູນໄດ້ແນວໃດ? ສິ່ງນີ້ຂຶ້ນກັບວ່າ ພວກເຈົ້າຈະສາມາດຮ່ວມມືກັບພຣະວິນຍານບໍລິສຸດ ໃນການກະທຳພາກປະຕິບັດຂອງພວກເຈົ້າໄດ້ ຫຼື ບໍ່. ເມື່ອມີການຮ່ວມມືທີ່ເໝາະສົມ, ພຣະວິນຍານບໍລິສຸດກໍຈະປະຕິບັດພາລະກິດໄດ້ດີຂຶ້ນ. ຖ້າບໍ່ມີການຮ່ວມມືທີ່ເໝາະສົມ ແຕ່ກົງກັນຂ້າມແມ່ນມີແຕ່ຄວາມສັບສົນເທົ່ານັ້ນ ພຣະວິນຍານບໍລິສຸດກໍຈະບໍ່ຢູ່ໃນຕຳແໜ່ງທີ່ຈະປ່ອຍພະລັງຂອງພຣະອົງໄດ້. "ຖ້າພວກເຈົ້າຮູ້ຈັກຕົວເອງ ແລະ ພວກເຈົ້າຮູ້ຈັກສັດຕູຂອງພວກເຈົ້າ ໄຊຊະນະກໍຈະເປັນຂອງພວກເຈົ້າຕະຫຼອດ". ໃຜກໍຕາມທີ່ກ່າວຖ້ອຍຄຳເຫຼົ່ານີ້ກ່ອນ, ສິ່ງເຫຼົ່ານັ້ນກໍອາດຈະນຳໃຊ້ກັບພວກເຈົ້າໄດ້ຢ່າງເໝາະສົມທີ່ສຸດ. ສະຫຼຸບກໍຄື ພວກເຈົ້າຕ້ອງຮູ້ຈັກຕົວເອງກ່ອນພວກເຈົ້າຈະສາມາດ

ຮູ້ຈັກສັດຕູຂອງພວກເຈົ້າ ແລະ ຫຼັງຈາກທີ່ພວກເຈົ້າໄດ້ເຮັດທັງສອງຢ່າງເທົ່ານັ້ນ ພວກເຈົ້າຈຶ່ງຈະເອົາຊະນະການສູ້ຮົບທຸກຄັ້ງ. ພວກເຈົ້າຄວນສາມາດເຮັດທຸກສິ່ງເຫຼົ່ານີ້ໄດ້. ບໍ່ວ່າພຣະເຈົ້າຈະຂໍຫຍັງຈາກເຈົ້າກໍຕາມ, ເຈົ້າຈຳເປັນຕ້ອງເຮັດເພື່ອສິ່ງນັ້ນຢ່າງສຸດກຳລັງຂອງເຈົ້າເທົ່ານັ້ນ ແລະ ເຮົາຫວັງວ່າ ເຈົ້າຈະສາມາດມາຢູ່ຕໍ່ໜ້າພຣະເຈົ້າ ແລະ ໃນທີ່ສຸດ ກໍອຸທິດຕົນຕໍ່ພຣະອົງເຖິງທີ່ສຸດ. ຕາບໃດທີ່ເຈົ້າສາມາດເຫັນຮອຍຍິ້ມທີ່ພໍໃຈຂອງພຣະເຈົ້າໃນຂະນະທີ່ພຣະອົງນັ່ງຢູ່ບັນລັງຂອງພຣະອົງ ແລະ ເຖິງແມ່ນວ່າຊ່ວງເວລານີ້ແມ່ນເວລາທີ່ກຳນົດການຕາຍຂອງເຈົ້າ, ເຈົ້າກໍຄວນສາມາດຫົວ ແລະ ຍິ້ມໃນຂະນະທີ່ເຈົ້າຫຼັບຕາລົງ. ໃນຊ່ວງເວລາຂອງເຈົ້າຢູ່ເທິງແຜ່ນດິນໂລກ, ເຈົ້າຕ້ອງເຮັດໜ້າທີ່ສຸດທ້າຍຂອງເຈົ້າເພື່ອພຣະເຈົ້າ. ໃນອະດີດ, ເປໂຕຖືກຄຶງໃສ່ໄມ້ກາງແຂນທາງປີ້ນເພື່ອພຣະເຈົ້າ; ແຕ່ໃນທີ່ສຸດແລ້ວ ເຈົ້າກໍຄວນເຮັດໃຫ້ພຣະເຈົ້າພໍໃຈ ແລະ ໃຊ້ເຫື່ອແຮງຂອງເຈົ້າທັງໝົດເພື່ອພຣະເຈົ້າ. ສິ່ງມີຊີວິດທີ່ຖືກສ້າງຂຶ້ນສາມາດເຮັດຫຍັງໄດ້ແທນພຣະເຈົ້າແດ່? ສະນັ້ນ, ເຈົ້າຄວນມອບຕົວເອງໃຫ້ແກ່ພຣະເຈົ້າໂດຍໄວເທົ່າທີ່ຈະໄວໄດ້ ເພື່ອໃຫ້ພຣະອົງໂຍນເຈົ້າຖິ້ມຕາມທີ່ພຣະອົງປາຖະໜາ. ຕາບໃດທີ່ມັນຈະເຮັດໃຫ້ພຣະເຈົ້າມີຄວາມສຸກ ແລະ ພໍໃຈ, ເຈົ້າກໍຄວນປ່ອຍໃຫ້ພຣະອົງເຮັດກັບເຈົ້າຕາມທີ່ພຣະອົງຕ້ອງການ. ມະນຸດມີສິດຫຍັງໃນການກ່າວຄຳຕໍ່ວ່າ?

# ບົດທີ 42

ເຮົາບໍ່ຮູ້ວ່າຜູ້ຄົນໄດ້ສັງເກດເຫັນການປ່ຽນແປງໃນຖ້ອຍຄຳໃນປັດຈຸບັນ ຫຼື ບໍ່. ບາງຄົນອາດໄດ້ເຫັນແລ້ວໜ້ອຍໜຶ່ງ, ແຕ່ພວກເຂົາບໍ່ກ້າເວົ້າຢ່າງໝັ້ນໃຈ. ບາງເທື່ອ ຄົນອື່ນບໍ່ໄດ້ຮັບຮູ້ຫຍັງເລີຍ. ເປັນຫຍັງຈຶ່ງມີການປ່ຽນແປງຢ່າງຍິ່ງໃຫຍ່ໃນຖ້ອຍຄຳຂອງພຣະເຈົ້າລະຫວ່າງວັນທີສິບສອງ ແລະ ວັນທີສິບຫ້າຂອງແຕ່ລະເດືອນ? ເຈົ້າໄດ້ໄຕ່ຕອງໃນສິ່ງນີ້ຢູ່ບໍ? ເຈົ້າມີມຸມມອງແນວໃດ? ເຈົ້າໄດ້ເຂົ້າໃຈຫຍັງຈາກຖ້ອຍຄຳທັງໝົດຂອງພຣະເຈົ້າບໍ? ແມ່ນຫຍັງຄືພາລະກິດຫຼັກທີ່ຖືກປະຕິບັດໃນລະຫວ່າງວັນທີສອງຂອງເດືອນເມສາ ແລະ ວັນທີສິບຫ້າຂອງເດືອນພຶດສະພາ? ໃນປັດຈຸບັນ, ເປັນຫຍັງຜູ້ຄົນຈຶ່ງບໍ່ຮູ້ຫຍັງ ແລະ ສັບສົນຄືກັບວ່າພວກເຂົາຖືກຕີຫົວດ້ວຍໄມ້ຄ້ອນ? ໃນປັດຈຸບັນ, ເປັນຫຍັງຈຶ່ງບໍ່ມີບົດຄວາມທີ່ມີຊື່ວ່າ: "ເລື່ອງເສຍຫາຍຂອງປະຊາຊົນແຫ່ງອານາຈັກ"? ໃນວັນທີສອງ ແລະ ວັນທີສີ່ຂອງເດືອນເມສາ, ພຣະເຈົ້າບໍ່ໄດ້ຊີ້ໃຫ້ເຫັນສະພາບຂອງມະນຸດ; ໃນທຳນອງດຽວກັນ, ໃນສອງສາມມື້ຫຼັງຈາກມື້ນີ້, ພຣະອົງກໍບໍ່ໄດ້ຊີ້ໃຫ້ເຫັນສະພາບຂອງມະນຸດ. ເປັນຫຍັງຈຶ່ງເປັນແບບນີ້? ແນ່ນອນວ່າມີປິດສະໜາທີ່ຍັງບໍ່ໄດ້ຖືກເປີດເຜີຍໃນນີ້ ແລ້ວເປັນຫຍັງຈຶ່ງມີການປີ້ນກັບ 180 ອົງສາ? ໃຫ້ພວກເຮົາມາລົມກັນໜ້ອຍໜຶ່ງກ່ຽວກັບວ່າເປັນຫຍັງພຣະເຈົ້າຈຶ່ງເວົ້າແບບນັ້ນ. ໃຫ້ພວກເຮົາມາເບິ່ງພຣະທຳໆອິດຂອງພຣະເຈົ້າ ເຊິ່ງພຣະອົງບໍ່ໄດ້ເສຍເວລາທີ່ຈະກ່າວວ່າ: "ທັນທີທີ່ພາລະກິດໃໝ່ເລີ່ມຕົ້ນຂຶ້ນ". ປະໂຫຍກດັ່ງກ່າວນີ້ໃຫ້ວີ່ແວວທຳອິດແກ່ເຈົ້າວ່າ ພາລະກິດຂອງພຣະເຈົ້າໄດ້ເຂົ້າສູ່ການເລີ່ມຕົ້ນໃໝ່ແລ້ວ, ພຣະອົງໄດ້ເລີ່ມຕົ້ນພາລະກິດໃໝ່ອີກຄັ້ງໜຶ່ງ. ສິ່ງນີ້ສະແດງວ່າ ການຂ້ຽນຕີນັ້ນກຳລັງຫຍັບເຂົ້າໃກ້ຈຸດສິ້ນສຸດ; ສາມາດເວົ້າໄດ້ວ່າ ໄດ້ມີການເຂົ້າສູ່ຈຸດສູງສຸດຂອງການຂ້ຽນຕີແລ້ວ ແລະ ສະນັ້ນ ພວກເຈົ້າຈຶ່ງຕ້ອງໃຊ້ເວລາຂອງເຈົ້າໃຫ້ຄຸ້ມຄ່າທີ່ສຸດເພື່ອປະສົບກັບພາລະກິດຂອງຍຸກແຫ່ງການຂ້ຽນຕີນີ້ຢ່າງເໝາະສົມ ເພື່ອວ່າ ພວກເຈົ້າຈະບໍ່ຫຼ້າຫຼັງ ແລະ ຖືກປະຖິ້ມ. ສິ່ງນີ້ລ້ວນແລ້ວແຕ່ເປັນພາລະກິດຂອງມະນຸດ ແລະ ມັນຮຽກຮ້ອງໃຫ້ມະນຸດເຮັດສຸດຄວາມສາມາດຂອງເຂົາເພື່ອການຮ່ວມມື. ເມື່ອການຂ້ຽນຕີຖືກສົ່ງອອກໄປທັງໝົດ, ພຣະເຈົ້າກໍຈະເລີ່ມຕົ້ນປະຕິບັດພາກສ່ວນຕໍ່ໄປຂອງພາລະກິດຂອງພຣະອົງ ຍ້ອນພຣະເຈົ້າກ່າວວ່າ: "... ສະນັ້ນເຮົາໄດ້ສືບຕໍ່ປະຕິບັດພາລະກິດຂອງເຮົາທ່າມກາງມະນຸດ... ໃນຊ່ວງເວລານີ້, ຫົວໃຈຂອງເຮົາແມ່ນເຕັມໄປດ້ວຍຄວາມດີອົກດີໃຈຢ່າງໃຫຍ່ຍ້ອນເຮົາໄດ້ຮັບເອົາຄົນບາງສ່ວນ ແລະ ສະນັ້ນ 'ທຸລະກິດ' ຂອງເຮົາກໍບໍ່ຕົກຕໍ່າອີກຕໍ່ໄປ; ມັນຈະບໍ່ປະກອບດ້ວຍພຣະທຳທີ່ວ່າງເປົ່າອີກຕໍ່ໄປ". ເມື່ອເວລາຜ່ານໄປ, ຜູ້ຄົນກໍເຫັນເຖິງຄວາມປະສົງຢ່າງຮີບດ່ວນຂອງພຣະເຈົ້າໃນພຣະທຳຂອງພຣະອົງ. ບໍ່ມີການຂໍ້ຕົວະໃນສິ່ງນີ້ ແລະ ໃນປັດຈຸບັນ ພຣະເຈົ້າປະຕິບັດພາລະກິດຂອງພຣະອົງໄວຂຶ້ນ. ສຳລັບມະນຸດແລ້ວ, ສິ່ງນີ້ບໍ່ໄດ້ຖືວ່າສອດຄ່ອງກັບຄວາມຕ້ອງການຂອງພຣະເຈົ້າທັງສິ້ນ, ແຕ່ສຳລັບພຣະເຈົ້າແລ້ວ ພາລະກິດຂອງພຣະອົງຖືກເຮັດໃຫ້ສຳເລັດແລ້ວ. ຍ້ອນຄວາມຄິດຂອງຜູ້ຄົນສັບສົນເກີນໄປ, ມຸມມອງຂອງພວກເຂົາກ່ຽວກັບສິ່ງຕ່າງໆຈຶ່ງມັກຈະຊັບຊ້ອນຢູ່ເລື້ອຍໆ. ຜູ້ຄົນຮຽກຮ້ອງຈາກຄົນອື່ນຫຼາຍເກີນໄປ, ແຕ່ພຣະເຈົ້າບໍ່ໄດ້ຮຽກຮ້ອງຫຼາຍ

ຂະໜາດນັ້ນຈາກມະນຸດ ແລະ ຍ້ອນສິ່ງນີ້ ຈຶ່ງອາດເຫັນໄດ້ວ່າຄວາມແຕກຕ່າງລະຫວ່າງພຣະເຈົ້າ ແລະ ມະນຸດນັ້ນມີຫຼາຍສໍ່າໃດ. ແນວຄິດຂອງຜູ້ຄົນແມ່ນຖືກເປີດເຜີຍອອກໃນທຸກສິ່ງທີ່ພຣະເຈົ້າເຮັດ. ມັນບໍ່ແມ່ນວ່າພຣະເຈົ້າຮຽກຮ້ອງຈາກຜູ້ຄົນຫຼາຍ ແລະ ຜູ້ຄົນບໍ່ສາມາດບັນລຸສິ່ງເຫຼົ່ານັ້ນໄດ້, ແຕ່ຜູ້ຄົນຮຽກຮ້ອງຈາກພຣະເຈົ້າຫຼາຍ ແລະ ພຣະເຈົ້າບໍ່ສາມາດບັນລຸສິ່ງເຫຼົ່ານັ້ນໄດ້. ຍ້ອນວ່າ ຫຼັງຈາກການປິ່ນປົວກໍຈະມີຜົນຕາມມາໃນມະນຸດຊາດ ຜູ້ເຊິ່ງຖືກເຮັດໃຫ້ເສື່ອມຊາມໂດຍຊາຕານເປັນເວລາຫຼາຍພັນປີ, ດັ່ງນັ້ນຜູ້ຄົນຈຶ່ງຮຽກຮ້ອງຢ່າງສູງຈາກພຣະເຈົ້າ ແລະ ບໍ່ມີການຜ່ອນຜັນແມ່ນແຕ່ໜ້ອຍດຽວ ໂດຍຢ້ານຢ່າງເລິກໆວ່າພຣະເຈົ້າບໍ່ພໍໃຈ. ສະນັ້ນ ຄວາມຈິງທີ່ວ່າຜູ້ຄົນບໍ່ສາມາດປະຕິບັດໜ້າທີ່ໃນຫຼາຍສິ່ງ ຄືຫົນທາງທີ່ພວກເຂົາເຮັດໃຫ້ຕົນເອງຖືກຂ້ຽນຕີ; ພວກເຂົາແບກຮັບເອົາຜົນຕາມມາຂອງການກະທຳຂອງພວກເຂົາເອງ ແລະ ນີ້ຄືການທົນທຸກທີ່ສຸດ. ຈາກຄວາມລຳບາກທີ່ຜູ້ຄົນຕ້ອງທົນທຸກ, ຫຼາຍກວ່າ 99% ແມ່ນເປັນທີ່ລັງກຽດໂດຍພຣະເຈົ້າ. ເວົ້າແບບກົງໄປກົງມາກໍຄື ບໍ່ມີຜູ້ໃດທົນທຸກເພື່ອພຣະເຈົ້າຢ່າງແທ້ຈິງ. ທຸກຄົນແບກຮັບຜົນຕາມມາຂອງການກະທຳຂອງພວກເຂົາເອງ ແລະ ແນ່ນອນວ່າຂັ້ນຕອນຂອງການຂ້ຽນຕີນີ້ກໍບໍ່ຖືກຍົກເວັ້ນ; ມັນເປັນຈອກນໍ້າຂົມທີ່ຕົ້ມໂດຍມະນຸດ ເຊິ່ງເຂົາຍົກຂຶ້ນໃສ່ປາກເພື່ອດື່ມດ້ວຍຕົນເອງ. ຍ້ອນພຣະເຈົ້າບໍ່ໄດ້ເປີດເຜີຍຈຸດປະສົງແທ້ຈິງຂອງການຂ້ຽນຕີຂອງພຣະອົງ, ເຖິງແມ່ນວ່າຈະມີຜູ້ຄົນຈຳນວນໜຶ່ງທີ່ຖືກສາບແຊ່ງ, ສິ່ງນີ້ກໍບໍ່ໄດ້ສະແດງເຖິງການຂ້ຽນຕີ. ຄົນຈຳນວນໜຶ່ງໄດ້ຮັບພອນ, ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ພວກເຂົາຈະໄດ້ຮັບພອນໃນອະນາຄົດ. ສຳລັບມະນຸດແລ້ວ, ເບິ່ງຄືກັບວ່າພຣະເຈົ້າເປັນພຣະເຈົ້າທີ່ບໍ່ຮັກສາພຣະທຳຂອງພຣະອົງ. ຢ່າໄດ້ກັງວົນໄປເລີຍ. ພຣະທຳເຫຼົ່ານີ້ອາດຮຸນແຮງເກີນໄປ, ແຕ່ຢ່າໄດ້ຄິດລົບ. ສິ່ງທີ່ເຮົາກ່າວແມ່ນມີຄວາມສຳພັນບາງຢ່າງຕໍ່ການທົນທຸກຂອງມະນຸດ, ແຕ່ເຮົາຄິດວ່າເຈົ້າຕ້ອງສ້າງຄວາມສຳພັນທີ່ດີກັບພຣະເຈົ້າ. ເຈົ້າຄວນມອບ "ຂອງຂວັນ" ໃຫ້ພຣະອົງຫຼາຍຂຶ້ນ. ມັນຈະເຮັດໃຫ້ພຣະອົງມີຄວາມສຸກຢ່າງແນ່ນອນ. ເຮົາເຊື່ອວ່າພຣະເຈົ້າຮັກຄົນທີ່ມອບ "ຂອງຂວັນ" ໃຫ້ກັບພຣະອົງ. ເຈົ້າວ່າແນວໃດ? ພຣະທຳເຫຼົ່ານີ້ຖືກຕ້ອງບໍ?

ໃນປັດຈຸບັນນີ້, ພວກເຈົ້າໄດ້ປະຖິ້ມຄວາມຄາດຫວັງຂອງພວກເຈົ້າຫຼາຍສໍ່າໃດ? ພາລະກິດຂອງພຣະເຈົ້າຈະສຳເລັດໃນໄວໆນີ້, ສະນັ້ນ ພວກເຈົ້າຈຶ່ງຕ້ອງປະຖິ້ມຄວາມຄາດຫວັງທັງໝົດຂອງພວກເຈົ້າ, ບໍ່ແມ່ນບໍ? ໃຫ້ພວກເຈົ້າກວດສອບຕົນເອງເຊັ່ນກັນ: ພວກເຈົ້າມັກທີ່ຈະລຸກຢືນຂຶ້ນສູງຢູ່ສະເໝີ, ຍ້ອງຍໍສັນລະເສີນຕົນເອງ ແລະ ແຫ່ຂະບວນຕົນເອງ. ນີ້ແມ່ນຫຍັງ? ໃນປັດຈຸບັນ, ເຮົາຍັງບໍ່ຮູ້ວ່າຄວາມຄາດຫວັງຂອງຜູ້ຄົນແມ່ນຫຍັງ. ຖ້າຜູ້ຄົນດຳລົງຊີວິດໂດຍຖືກກືນກິນໂດຍທະເລແຫ່ງຄວາມທຸກທໍລະມານແທ້ໆ, ເມື່ອພວກເຂົາດຳລົງຊີວິດທ່າມກາງການຫຼົ່ຫຼອມແຫ່ງຄວາມລຳບາກ ຫຼື ບໍ່ດັ່ງນັ້ນກໍຢູ່ພາຍໃຕ້ການຂົ່ມຂູ່ຕ່າງໆຈາກການທໍລະມານ ຫຼື ເມື່ອພວກເຂົາດຳລົງຊີວິດໃນເວລາແຫ່ງການຖືກປະຕິເສດໂດຍທຸກຄົນ, ຫຼຽວເບິ່ງທ້ອງຟ້າ ແລະ ຖອນໃຈເລິກໆ, ໃນຄວາມຄິດຂອງພວກເຂົາໃນເວລານັ້ນ ບາງເທື່ອ ພວກເຂົາອາດປະຖິ້ມຄວາມຄາດຫວັງຂອງພວກເຂົາ. ນີ້ເປັນຍ້ອນຜູ້ຄົນຊອກຫາໂລກແຫ່ງອຸດົມຄະຕິ ໃນທ່າມກາງຄວາມໝົດຫວັງ ແລະ ບໍ່ມີຜູ້ໃດທີ່ຢູ່ໃນສະພາບທີ່ສະບາຍ ເຄີຍປະຖິ້ມ

ການສະແຫວງຫາຄວາມຝັນທີ່ສວຍງາມຂອງພວກເຂົາເອງ. ສິ່ງນີ້ອາດບໍ່ເປັນຈິງ, ແຕ່ເຮົາປາຖະໜາວ່າສິ່ງນີ້ຈະບໍ່ຢູ່ໃນຫົວໃຈຂອງຜູ້ຄົນ. ພວກເຈົ້າຍັງປາຖະໜາທີ່ຈະຖືກຍົກຂຶ້ນໄປສະຫວັນທັງເປັນບໍ? ພວກເຈົ້າຍັງປາຖະໜາທີ່ຈະປ່ຽນແປງຮູບຮ່າງຂອງພວກເຈົ້າໃນເນື້ອໜັງບໍ? ເຮົາບໍ່ຮູ້ວ່າພວກເຈົ້າມີຄວາມຄິດເຫັນແບບດຽວກັນບໍ, ແຕ່ເຮົາຮູ້ສຶກຢູ່ສະເໝີວ່າ ສິ່ງນີ້ບໍ່ເປັນຈິງ. ຄວາມຄິດດັ່ງກ່າວເບິ່ງຄືໄຮ້ປະໂຫຍດເກີນໄປ. ຜູ້ຄົນເວົ້າສິ່ງຕ່າງໆແບບນີ້: "ໃຫ້ປະຖິ້ມຄວາມຄາດຫວັງຂອງເຈົ້າ, ໃຫ້ເປັນຈິງຫຼາຍຍິ່ງຂຶ້ນ". ເຈົ້າຂໍຮ້ອງໃຫ້ຜູ້ຄົນກຳຈັດຄວາມຄິດໃນການໄດ້ຮັບພອນ, ແຕ່ສຳລັບຕົວເຈົ້າເອງເດ? ເຈົ້າປະຕິເສດຄວາມຄິດໃນການໄດ້ຮັບພອນຂອງຜູ້ຄົນ ໃນຂະນະທີ່ເຈົ້າເອງສະແຫວງຫາພອນບໍ? ເຈົ້າບໍ່ຍອມໃຫ້ຄົນອື່ນໄດ້ຮັບພອນ ໃນຂະນະດຽວກັນເຈົ້າເອງພັດຄິດເຖິງພອນຢູ່ຢ່າງລັບໆ ແລ້ວນີ້ສະແດງໃຫ້ເຫັນວ່າເຈົ້າເປັນຄົນແບບໃດ? ຄົນຫຼອກລວງ! ເມື່ອເຈົ້າເຮັດແບບນັ້ນ, ຄວາມສຳນຶກຂອງເຈົ້າຈະບໍ່ຖືກກ່າວຫາບໍ? ໃນຫົວໃຈຂອງເຈົ້າ, ເຈົ້າບໍ່ຮູ້ສຶກເປັນໜີ້ບຸນຄຸນບໍ? ເຈົ້າບໍ່ແມ່ນຄົນລໍ້ລວງບໍ? ເຈົ້າຂຸດຄຳເວົ້າທີ່ຢູ່ໃນຫົວໃຈຂອງຄົນອື່ນ, ແຕ່ບໍ່ເວົ້າຫຍັງກ່ຽວກັບຄຳເວົ້າທີ່ຢູ່ໃນຫົວໃຈຂອງເຈົ້າເອງ. ເຈົ້າຊ່າງເປັນເສດຂີ້ເຫຍື້ອທີ່ບໍ່ມີຄຸນຄ່າຫຍັງເລີຍ! ເຮົາສົງໄສວ່າພວກເຈົ້າກຳລັງຄິດຫຍັງໃນຫົວໃຈຂອງພວກເຈົ້າ ເມື່ອພວກເຈົ້າກ່າວ. ພວກເຈົ້າຈະບໍ່ສາມາດຖືກຕັກເຕືອນໂດຍພຣະວິນຍານບໍລິສຸດບໍ? ສິ່ງນີ້ບໍ່ໄດ້ລົບກວນສັກສີຂອງພວກເຈົ້າບໍ? ພວກເຈົ້າບໍ່ຮູ້ວ່າແມ່ນຫຍັງທີ່ດີສຳລັບພວກເຈົ້າແທ້ໆ! ພວກເຈົ້າທຸກຄົນລ້ວນແລ້ວແຕ່ເປັນຄືກັບ ທ່ານ ນັງກົວ ເຊິ່ງກໍຄືຕົວປອມ. ບໍ່ແປກໃຈເລີຍທີ່ພຣະເຈົ້າໃຊ້ເຄື່ອງໝາຍວົງຢືມກັບວະລີທີ່ວ່າ: "ອຸທິດຕົນເອງ" ໃນປະໂຫຍກທີ່ວ່າ: "ຜູ້ຄົນລ້ວນແລ້ວແຕ່ເຕັມໃຈທີ່ຈະ 'ອຸທິດຕົນເອງ'". ພຣະເຈົ້າຮູ້ຈັກມະນຸດຄືກັບຫຼັງມືຂອງພຣະອົງ ແລະ ບໍ່ວ່າການຫຼອກລວງຂອງມະນຸດຈະມີສິລະປະຫຼາຍສໍ່າໃດກໍຕາມ, ເຖິງແມ່ນວ່າ ເຂົາຈະບໍ່ໄດ້ເປີດເຜີຍຫຍັງໃຫ້ເຫັນ, ສີໜ້າຂອງເຂົາຈະບໍ່ແດງ ຫຼື ຫົວໃຈຂອງເຂົາບໍ່ເຕັ້ນແຮງກໍຕາມ, ສາຍຕາຂອງພຣະເຈົ້າແມ່ນມີແວວວາວ, ສະນັ້ນມະນຸດຈຶ່ງມີບັນຫາໃນການຫຼົບໜີຈາກການຈ້ອງເບິ່ງຂອງພຣະເຈົ້າຢູ່ສະເໝີ. ມັນຄືກັບວ່າພຣະເຈົ້າມີສາຍຕາລັງສີ ແລະ ສາມາດເຫັນຜ່ານອະໄວຍະວະພາຍໃນຂອງມະນຸດໄດ້ ຄືກັບວ່າພຣະອົງສາມາດເບິ່ງທະລຸຜູ້ຄົນ ແລະ ກຳນົດໄດ້ວ່າພວກເຂົາມີເລືອດປະເພດໃດ ໂດຍບໍ່ຕ້ອງກວດ. ນັ້ນຄືສະຕິປັນຍາຂອງພຣະເຈົ້າ ແລະ ມະນຸດບໍ່ສາມາດຮຽນແບບໄດ້. ດັ່ງທີ່ພຣະເຈົ້າກ່າວວ່າ: "ເປັນຫຍັງເຮົາໄດ້ປະຕິບັດພາລະກິດຫຼາຍຢ່າງ, ແຕ່ບໍ່ມີຫຼັກຖານກ່ຽວກັບພາລະກິດນັ້ນໃນຜູ້ຄົນ? ເຮົາບໍ່ໄດ້ພະຍາຍາມຢ່າງພຽງພໍບໍ?" ການຮ່ວມມືຂອງມະນຸດກັບພຣະເຈົ້າກໍຂາດເຂີນເກີນໄປ ແລະ ສາມາດເວົ້າໄດ້ວ່າ ມີຫຼາຍຢ່າງທີ່ເປັນລົບຢູ່ພາຍໃນມະນຸດ ແລະ ຍາກທີ່ຜູ້ຄົນຈະມີຄວາມຄິດບວກ. ມີພຽງແຕ່ບາງຄັ້ງບາງຄາວທີ່ພວກເຂົາອາດຈະມີຄວາມຄິດບວກເລັກນ້ອຍ, ແຕ່ມັນກໍມີມົນທິນເກີນໄປ. ສິ່ງນີ້ສະແດງໃຫ້ເຫັນວ່າຜູ້ຄົນຮັກພຣະເຈົ້າຫຼາຍສໍ່າໃດ; ມັນເປັນຄືກັບວ່າມີພຽງຄວາມຮັກໜຶ່ງສ່ວນຮ້ອຍລ້ານສຳລັບພຣະເຈົ້າໃນຫົວໃຈຂອງພວກເຂົາ, ໂດຍທີ່ 50% ກໍຍັງມີມົນທິນຢູ່. ນີ້ຄືເຫດຜົນທີ່ວ່າເປັນຫຍັງພຣະເຈົ້າຈຶ່ງເວົ້າວ່າພຣະອົງບໍ່ໄດ້ຮັບຫຼັກຖານຈາກມະນຸດ. ມັນເປັນຍ້ອນຄວາມບໍ່ເຊື່ອຟັງຂອງມະນຸດແທ້ໆ ນໍ້າສຽງຂອງຖ້ອຍຄຳຂອງພຣະເຈົ້າຈຶ່ງໄຮ້ຫົວໃຈ ແລະ ເຢັນຊາ. ເຖິງແມ່ນວ່າ ພຣະເຈົ້າບໍ່ໄດ້ກ່າວເຖິງອະດີດ

ກັບມະນຸດ, ຜູ້ຄົນກໍຢາກຈະລະລຶກເຖິງມັນຢູ່ສະເໝີ ເພື່ອສະແດງຕົນເອງຕໍ່ໜ້າພຣະເຈົ້າ ແລະ ພວກເຂົາຢາກເວົ້າກ່ຽວກັບອະດີດຢູ່ສະເໝີ ແຕ່ພຣະເຈົ້າກໍບໍ່ເຄີຍປະຕິບັດຕໍ່ອະດີດຂອງມະນຸດຄືກັບປັດຈຸບັນ; ກົງກັນຂ້າມ, ພຣະອົງເຂົ້າຫາຜູ້ຄົນໃນປັດຈຸບັນອີງຕາມສະພາບປັດຈຸບັນ. ນີ້ແມ່ນທ່າທີຂອງພຣະເຈົ້າ ແລະ ໃນສິ່ງນີ້ ພຣະເຈົ້າໄດ້ກ່າວພຣະທຳເຫຼົ່ານີ້ຢ່າງຊັດເຈນ ເພື່ອປ້ອງກັນບໍ່ໃຫ້ຜູ້ຄົນເວົ້າໃນອະນາຄົດວ່າພຣະເຈົ້າບໍ່ມີເຫດຜົນເກີນໄປ. ຍ້ອນພຣະເຈົ້າບໍ່ເຮັດສິ່ງທີ່ບໍ່ມີເຫດຜົນ, ແຕ່ບອກຜູ້ຄົນກ່ຽວກັບຂໍ້ແທ້ຈິງ, ຢ້ານວ່າຜູ້ຄົນຈະບໍ່ສາມາດຍຶດໝັ້ນໄດ້, ຍ້ອນວ່າ ແທ້ຈິງແລ້ວ ມະນຸດແມ່ນອ່ອນແອ. ເມື່ອໄດ້ຍິນພຣະທຳເຫຼົ່ານີ້ ແລ້ວເປັນແນວໃດ: ພວກເຈົ້າເຕັມໃຈທີ່ຈະຟັງ ແລະ ອ່ອນນ້ອມ ແລະ ບໍ່ຄິດຫຍັງກ່ຽວກັບສິ່ງນັ້ນບໍ?

ສິ່ງທີ່ກ່າວມາຂ້າງເທິງບໍ່ແມ່ນປະເດັນ; ມັນບໍ່ສຳຄັນວ່າ ສິ່ງນັ້ນຖືກເວົ້າເຖິງ ຫຼື ບໍ່. ເຮົາຫວັງວ່າພວກເຈົ້າຈະບໍ່ຮັບເອົາການຍົກເວັ້ນ ເພາະວ່າພຣະເຈົ້າໄດ້ມາປະຕິບັດພາລະກິດແຫ່ງພຣະທຳ ແລະພຣະອົງມັກສົນທະນາກ່ຽວກັບທຸກສິ່ງພາຍໃຕ້ດວງຕາເວັນ. ແຕ່ເຖິງຢ່າງໃດກໍຕາມ ເຮົາຫວັງວ່າພວກເຈົ້າຈະອ່ານພຣະທຳເຫຼົ່ານີ້ ແລະ ພວກເຈົ້າຈະບໍ່ເມີນເສີຍຕໍ່ພຣະທຳເຫຼົ່ານີ້. ພວກເຈົ້າວ່າແນວໃດ? ພວກເຈົ້າຈະເຮັດແບບນັ້ນບໍ? ເມື່ອບໍ່ດົນມານີ້ ໄດ້ມີການກ່າວວ່າ ໃນປັດຈຸບັນ ພຣະທຳຂອງພຣະເຈົ້າໄດ້ເປີດເຜີຍຂໍ້ມູນໃໝ່: ວິທີການທີ່ພຣະເຈົ້າປະຕິບັດພາລະກິດແມ່ນກຳລັງຈະຖືກປ່ຽນແປງ. ດ້ວຍເຫດນັ້ນ, ມັນຈະດີກວ່າທີ່ຈະໃສ່ໃຈກັບປະເດັນທີ່ສຳຄັນນີ້. ສາມາດເວົ້າໄດ້ວ່າ ຖ້ອຍຄຳທັງໝົດໃນປັດຈຸບັນທຳນາຍເຖິງບັນຫາໃນອະນາຄົດ; ຖ້ອຍຄຳເຫຼົ່ານີ້ຄືວິທີທີ່ພຣະເຈົ້າຈັດແຈງສຳລັບຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງ. ພຣະເຈົ້າໃກ້ຈະສຳເລັດພາລະກິດຂອງພຣະອົງໃນຜູ້ຄົນຂອງຄຣິສຕະຈັກ ແລະ ຫຼັງຈາກນັ້ນ ພຣະອົງກໍຈະປາກົດຕໍ່ໜ້າທຸກຄົນດ້ວຍຄວາມໂກດຮ້າຍ. ດັ່ງທີ່ພຣະເຈົ້າກ່າວວ່າ: "ເຮົາຈະເຮັດໃຫ້ຜູ້ຄົນເທິງແຜ່ນດິນໂລກຮັບຮູ້ເຖິງການກະທຳຂອງເຮົາ ແລະ ການກະທຳຂອງເຮົາຈະຕ້ອງຖືກພິສູດຢູ່ຕໍ່ໜ້າ 'ທີ່ນັ່ງແຫ່ງການພິພາກສາ', ເພື່ອວ່າພວກມັນຈະຖືກຮັບຮູ້ໃນທ່າມກາງຜູ້ຄົນທົ່ວແຜ່ນດິນໂລກ ເຊິ່ງເປັນຜູ້ທີ່ຈະຍິນຍອມ". ພວກເຈົ້າເຫັນຫຍັງໃນພຣະທຳເຫຼົ່ານີ້ບໍ? ໃນນີ້ແມ່ນມີບົດສະຫຼຸບຂອງສ່ວນຕໍ່ໄປຂອງພາລະກິດຂອງພຣະເຈົ້າ. ກ່ອນອື່ນ, ພຣະເຈົ້າຈະເຮັດໃຫ້ໝາເຝົ້າຍາມທຸກໂຕທີ່ມີອຳນາດທາງການເມືອງເຊື່ອຢ່າງຈິງໃຈກ່ອນ ແລະ ພຣະອົງຈະເຮັດໃຫ້ພວກມັນກ້າວຖອຍອອກຈາກຂັ້ນຕອນປະຫວັດສາດດ້ວຍຕົວພວກມັນເອງ ໂດຍບໍ່ພາກັນຕໍ່ສູ້ເພື່ອສະຖານະ ຫຼື ວາງກົນອຸບາຍ ແລະ ວາງແຜນຮ້າຍອີກຕໍ່ໄປ. ພາລະກິດນີ້ຈະຖືກປະຕິບັດຜ່ານພຣະເຈົ້າໂດຍເຮັດໃຫ້ເກີດມີໄພພິບັດຕ່າງໆເທິງແຜ່ນດິນໂລກ. ແຕ່ພຣະເຈົ້າຈະບໍ່ປາກົດຕົວເລີຍ. ໃນເວລານີ້, ປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ຍັງຈະເປັນດິນແດນແຫ່ງຄວາມສົກກະປົກ ແລະ ສະນັ້ນ ພຣະເຈົ້າຈະບໍ່ປາກົດຕົວ, ແຕ່ຈະປາກົດຕົວຜ່ານການຂ້ຽນຕີເທົ່ານັ້ນ. ນັ້ນແມ່ນອຸປະນິໄສທີ່ຊອບທຳຂອງພຣະເຈົ້າ ເຊິ່ງບໍ່ມີຜູ້ໃດສາມາດຫຼົບໜີຈາກສິ່ງນັ້ນໄດ້. ໃນຊ່ວງເວລານີ້, ທຸກສິ່ງທີ່ອາໄສຢູ່ໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ຈະທົນທຸກກັບໄພພິບັດຢ່າງໃຫຍ່ຫຼວງ ເຊິ່ງໂດຍທຳມະຊາດແລ້ວ ແມ່ນລວມເຖິງອານາຈັກເທິງແຜ່ນດິນໂລກເຊັ່ນກັນ (ຄຣິສຕະຈັກ). ນີ້ແມ່ນເວລາທີ່ຄວາມຈິງຈະປາກົດອອກຢ່າງແທ້ຈິງ ແລະ ດ້ວຍເຫດນັ້ນ

ທຸກຄົນກໍຈະໄດ້ປະສົບກັບມັນ ແລະ ບໍ່ມີຜູ້ໃດຈະສາມາດຫຼົບໜີໄດ້. ສິ່ງນີ້ຖືກກໍານົດລ່ວງໜ້າໂດຍພຣະເຈົ້າແລ້ວ. ມັນເປັນຍ້ອນຂັ້ນຕອນນີ້ຂອງພາລະກິດ, ພຣະເຈົ້າຈຶ່ງກ່າວວ່າ: "ປັດຈຸບັນນີ້ແມ່ນເວລາທີ່ຈະປະຕິບັດແຜນການທີ່ຍິ່ງໃຫຍ່". ຍ້ອນໃນອະນາຄົດ ແມ່ນຈະບໍ່ມີຄຣິສຕະຈັກເທິງແຜ່ນດິນໂລກອີກ ແລະ ເນື່ອງຈາກການມາເຖິງຂອງໄພພິບັດ, ຜູ້ຄົນຈະສາມາດຄິດເຖິງສິ່ງທີ່ຢູ່ຕໍ່ໜ້າພວກເຂົາເທົ່ານັ້ນ ແລະ ຈະເບິ່ງຂ້າມສິ່ງອື່ນໆ ແລະ ມັນກໍຈະຍາກສໍາລັບພວກເຂົາທີ່ຈະຮັບເອົາພຣະເຈົ້າທ່າມກາງໄພພິບັດ. ສະນັ້ນ ຜູ້ຄົນຈຶ່ງຖືກຮຽກຮ້ອງໃຫ້ຮັກພຣະເຈົ້າຢ່າງໝົດຫົວໃຈຂອງພວກເຂົາໃນຊ່ວງເວລາທີ່ມະຫັດສະຈັນນີ້ ເພື່ອວ່າພວກເຂົາຈະບໍ່ພາດໂອກາດ. ເມື່ອຄວາມຈິງນີ້ຜ່ານໄປ, ພຣະເຈົ້າກໍຈະໄດ້ເອົາຊະນະມັງກອນແດງທີ່ຍິ່ງໃຫຍ່ໂດຍສິ້ນເຊີງ ແລະ ສະນັ້ນ ພາລະກິດແຫ່ງການເປັນພະຍານຂອງຜູ້ຄົນຂອງພຣະເຈົ້າກໍຈະສິ້ນສຸດລົງ; ຫຼັງຈາກນັ້ນ ພຣະເຈົ້າກໍຈະເລີ່ມຕົ້ນຂັ້ນຕອນຕໍ່ໄປຂອງພາລະກິດ ໂດຍທໍາລາຍປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ໃນທີ່ສຸດ ກໍຈະຕອກຕະປູຄຶງຜູ້ຄົນທົ່ວຈັກກະວານເທິງໄມ້ກາງແຂນທາງປີ້ນ ແລ້ວຫຼັງຈາກນັ້ນ ພຣະອົງຈະທໍາລາຍມະນຸດຊາດທັງປວງ. ສິ່ງເຫຼົ່ານີ້ແມ່ນຂັ້ນຕອນໃນອະນາຄົດຂອງພາລະກິດຂອງພຣະເຈົ້າ. ສະນັ້ນ ພວກເຈົ້າຄວນສະແຫວງຫາຢ່າງສຸດຄວາມສາມາດເພື່ອທີ່ຈະຮັກພຣະເຈົ້າໃນສະພາບແວດລ້ອມທີ່ສະຫງົບສຸກນີ້. ໃນອະນາຄົດ ພວກເຈົ້າຈະບໍ່ມີໂອກາດທີ່ຈະຮັກພຣະເຈົ້າອີກແລ້ວ ຍ້ອນຜູ້ຄົນພຽງແຕ່ມີໂອກາດຮັກພຣະເຈົ້າໃນເນື້ອໜັງເທົ່ານັ້ນ; ເມື່ອພວກເຂົາດໍາລົງຊີວິດຢູ່ໃນໂລກອື່ນ ກໍຈະບໍ່ມີຜູ້ໃດເວົ້າເຖິງການຮັກພຣະເຈົ້າອີກ. ນີ້ບໍ່ແມ່ນຄວາມຮັບຜິດຊອບຂອງສິ່ງທີ່ຖືກສ້າງຂຶ້ນບໍ? ແລ້ວພວກເຈົ້າຄວນຮັກພຣະເຈົ້າແນວໃດໃນຊ່ວງເວລາທີ່ພວກເຈົ້າຍັງມີຊີວິດຢູ່? ເຈົ້າເຄີຍຄິດເຖິງສິ່ງນີ້ບໍ? ເຈົ້າກໍາລັງລໍຖ້າຈົນເຖິງຫຼັງຈາກທີ່ເຈົ້າຕາຍແລ້ວຈຶ່ງຈະຮັກພຣະເຈົ້າບໍ? ນີ້ບໍ່ແມ່ນການສົນທະນາທີ່ວ່າງເປົ່າບໍ? ໃນປັດຈຸບັນ, ເປັນຫຍັງເຈົ້າຈຶ່ງບໍ່ສະແຫວງຫາທີ່ຈະຮັກພຣະເຈົ້າ? ການຮັກພຣະເຈົ້າໃນຂະນະທີ່ກໍາລັງຫຍຸ້ງວຽກຈະສາມາດເປັນຄວາມຮັກທີ່ແທ້ຈິງສໍາລັບພຣະເຈົ້າບໍ? ເຫດຜົນທີ່ວ່າເປັນຫຍັງຈຶ່ງເວົ້າວ່າ ຂັ້ນຕອນນີ້ຂອງພາລະກິດຂອງພຣະເຈົ້າຈະສິ້ນສຸດລົງໃນບໍ່ຊ້າ ກໍຍ້ອນວ່າ ພຣະເຈົ້າໄດ້ມີຄໍາພະຍານຕໍ່ໜ້າຊາຕານແລ້ວ. ສະນັ້ນ ຈຶ່ງບໍ່ຈໍາເປັນທີ່ຈະໃຫ້ມະນຸດເຮັດຫຍັງອີກເລີຍ; ມະນຸດພຽງແຕ່ຖືກຮຽກຮ້ອງໃຫ້ສະແຫວງຫາເພື່ອຮັກພຣະເຈົ້າໃນຊ່ວງເວລາທີ່ເຂົາມີຊີວິດຢູ່ເທົ່ານັ້ນ. ນີ້ແມ່ນກຸນແຈທີ່ສໍາຄັນ. ຍ້ອນເງື່ອນໄຂຂອງພຣະເຈົ້າບໍ່ໄດ້ມີຫຼາຍ ແລະ ຍິ່ງໄປກວ່ານັ້ນ ຍ້ອນຄວາມກັງວົນທີ່ເຜົາໄໝ້ໃນຫົວໃຈຂອງພຣະອົງ, ພຣະອົງຈຶ່ງໄດ້ເປີດເຜີຍບົດສະຫຼຸບຂອງຂັ້ນຕອນຕໍ່ໄປຂອງພາລະກິດກ່ອນຂັ້ນຕອນຂອງພາລະກິດນີ້ຈະສໍາເລັດລົງ ເຊິ່ງສະແດງຢ່າງຊັດເຈນວ່າ ມີເວລາຫຼາຍສໍ່າໃດ; ຖ້າພຣະເຈົ້າບໍ່ກັງວົນໃນຫົວໃຈຂອງພຣະອົງ, ພຣະອົງຈະກ່າວພຣະທໍາເຫຼົ່ານີ້ຢ່າງໄວແບບນັ້ນບໍ? ມັນເປັນຍ້ອນວ່າ ພຣະເຈົ້າມີເວລາສັ້ນ ພຣະອົງຈຶ່ງປະຕິບັດພາລະກິດໃນລັກສະນະນີ້. ຫວັງວ່າພວກເຈົ້າຈະສາມາດຮັກພຣະເຈົ້າໝົດຫົວໃຈຂອງພວກເຈົ້າ, ໝົດຄວາມຄິດຂອງພວກເຈົ້າ ແລະ ໝົດກໍາລັງຂອງພວກເຈົ້າ ຄືກັບພວກເຈົ້າຮັກຊີວິດຂອງພວກເຈົ້າເອງ. ນີ້ບໍ່ແມ່ນຊີວິດທີ່ມີຄວາມໝາຍທີ່ສຸດບໍ? ພວກເຈົ້າຈະສາມາດຄົ້ນພົບຄວາມໝາຍຂອງຊີວິດໄດ້ຢູ່ໃສອີກ? ເຈົ້າບໍ່ແມ່ນຕາບອດເກີນໄປບໍ? ເຈົ້າເຕັມໃຈທີ່ຈະຮັກພຣະເຈົ້າບໍ? ພຣະເຈົ້າສົມຄວນແກ່ຄວາມຮັກຂອງ

ມະນຸດບໍ? ຜູ້ຄົນສົມຄວນແກ່ຄວາມເຫຼື້ອມໃສຂອງມະນຸດບໍ? ແລ້ວເຈົ້າຄວນເຮັດແນວໃດ? ໃຫ້ຮັກພຣະເຈົ້າຢ່າງຈິງຈັງ ໂດຍບໍ່ມີເງື່ອນໄຂ ແລະ ເບິ່ງວ່າພຣະເຈົ້າຈະເຮັດຫຍັງກັບເຈົ້າ. ເບິ່ງວ່າພຣະອົງຈະຂ້າເຈົ້າຖິ້ມ ຫຼື ບໍ່. ສະຫຼຸບກໍຄື ໜ້າທີ່ຂອງການຮັກພຣະເຈົ້າສຳຄັນໄປກວ່າການກ່າຍ ແລະ ການຂຽນສິ່ງຕ່າງໆລົງເພື່ອພຣະເຈົ້າ. ເຈົ້າຄວນໃຫ້ບຸລິມະສິດກັບສິ່ງທີ່ສຳຄັນທີ່ສຸດ ເພື່ອວ່າຊີວິດຂອງເຈົ້າຈະມີຄຸນຄ່າຫຼາຍຂຶ້ນ ແລະ ເຕັມໄປດ້ວຍຄວາມສຸກ ແລະ ຫຼັງຈາກນັ້ນ ເຈົ້າກໍຄວນລໍຖ້າ "ການພິພາກສາ" ຂອງພຣະເຈົ້າສຳລັບເຈົ້າ. ເຮົາສົງໄສວ່າແຜນການຂອງເຈົ້າຈະລວມມີການຮັກພຣະເຈົ້າ ຫຼື ບໍ່, ເຮົາປາຖະໜາໃຫ້ແຜນການຂອງທຸກຄົນກາຍເປັນສິ່ງທີ່ຖືກພຣະເຈົ້າເຮັດໃຫ້ສຳເລັດ ແລະ ສິ່ງເຫຼົ່ານັ້ນທັງໝົດຈະກາຍເປັນຄວາມຈິງ.

# ບົດທີ 44 ແລະ 45

ນັບຕັ້ງແຕ່ເວລາທີ່ພຣະເຈົ້າໄດ້ບອກມະນຸດກ່ຽວກັບ "ຄວາມຮັກສຳລັບພຣະເຈົ້າ" ເຊິ່ງເປັນບົດຮຽນທີ່ເລິກເຊິ່ງທີ່ສຸດ ພຣະອົງໄດ້ສຸມໃສ່ການກ່າວເຖິງຫົວຂໍ້ນີ້ໃນ "ພຣະຄຳຂອງພຣະວິນຍານທັງເຈັດ" ເຮັດໃຫ້ທຸກຄົນພະຍາຍາມຮູ້ຈັກຄວາມວ່າງເປົ່າຂອງຊີວິດມະນຸດ ແລະ ດ້ວຍເຫດນັ້ນ ຈຶ່ງເປັນການຂຸດເອົາຄວາມຮັກທີ່ແທ້ຈິງພາຍໃນພວກເຂົາອອກມາ. ຜູ້ທີ່ຢູ່ໃນຂັ້ນຕອນປັດຈຸບັນຮັກພຣະເຈົ້າຫຼາຍສໍ່າໃດ? ພວກເຈົ້າຮູ້ບໍ? ບໍ່ມີຂໍ້ຈຳກັດຕໍ່ບົດຮຽນກ່ຽວກັບ "ຄວາມຮັກສຳລັບພຣະເຈົ້າ". ທຸກຄົນມີຄວາມເຂົ້າໃຈກ່ຽວກັບຊີວິດມະນຸດຢ່າງໃດ? ທັດສະນະຄະຕິຂອງພວກເຂົາ ທີ່ມີຕໍ່ຄວາມຮັກສຳລັບພຣະເຈົ້າແມ່ນຫຍັງ? ພວກເຂົາເຕັມໃຈ ຫຼື ບໍ່ເຕັມໃຈ? ພວກເຂົາໄດ້ຕິດຕາມຝູງຊົນ ຫຼື ກຽດຊັງເນື້ອໜັງບໍ? ພວກເຈົ້າຄວນມີຄວາມຊັດເຈນ ແລະ ເຂົ້າໃຈທຸກສິ່ງເຫຼົ່ານີ້. ພາຍໃນຜູ້ຄົນແມ່ນບໍ່ມີຫຍັງແທ້ບໍ? "ເຮົາຕ້ອງການໃຫ້ມະນຸດຮັກເຮົາຢ່າງແທ້ຈິງ; ເຖິງຢ່າງໃດກໍຕາມ ໃນປັດຈຸບັນ ຜູ້ຄົນຍັງຊັກຊ້າເສຍເວລາ ໂດຍບໍ່ສາມາດມອບຄວາມຮັກຢ່າງແທ້ຈິງຂອງພວກເຂົາໃຫ້ກັບເຮົາ. ໃນຈິນຕະນາການຂອງພວກເຂົາ, ພວກເຂົາເຊື່ອວ່າ ຖ້າພວກເຂົາມອບຄວາມຮັກທີ່ແທ້ຈິງຂອງພວກເຂົາໃຫ້ກັບເຮົາ ພວກເຂົາຈະບໍ່ມີຫຍັງເຫຼືອເລີຍ". ໃນພຣະທຳເຫຼົ່ານີ້ "ຄວາມຮັກທີ່ແທ້ຈິງ" ແມ່ນໝາຍເຖິງຫຍັງກັນແທ້? ເປັນຫຍັງພຣະເຈົ້າຍັງຖາມຫາຄວາມຮັກທີ່ແທ້ຈິງຂອງຜູ້ຄົນໃນຍຸກນີ້ ໃນເມື່ອ "ທຸກຄົນຮັກພຣະເຈົ້າ"? ສະນັ້ນ, ເຈດຕະນາຂອງພຣະເຈົ້າແມ່ນເພື່ອຂໍໃຫ້ມະນຸດຂຽນຄວາມໝາຍຂອງຄວາມຮັກທີ່ແທ້ຈິງໃສ່ເຈ້ຍຄຳຕອບ ແລະ ນີ້ຄືວຽກບ້ານທີ່ພຣະເຈົ້າໄດ້ມອບໃຫ້ມະນຸດ. ສຳລັບຂັ້ນຕອນນີ້ໃນປັດຈຸບັນ ເຖິງແມ່ນວ່າ ພຣະເຈົ້າຈະບໍ່ຮຽກຮ້ອງຫຼາຍຈາກມະນຸດ ແຕ່ຜູ້ຄົນກໍຍັງບໍ່ມີເງື່ອນໄຂດັ່ງເດີມທີ່ພຣະເຈົ້າຕ້ອງການຈາກມະນຸດ; ເວົ້າອີກແບບໜຶ່ງກໍຄື ພວກເຂົາຍັງບໍ່ໄດ້ທຸ້ມເທເຫື່ອແຮງທັງໝົດໃນການຮັກພຣະເຈົ້າ. ສະນັ້ນ, ໃນທ່າມກາງຄວາມບໍ່ເຕັມໃຈຂອງພວກເຂົາ ພຣະເຈົ້າຍັງສ້າງເງື່ອນໄຂຂອງພຣະອົງແກ່ຜູ້ຄົນ ຈົນກວ່າພາລະກິດນີ້ຈະມີຜົນ ແລະ ພຣະອົງໄດ້ຮັບສະຫງ່າລາສີໃນພາລະກິດນີ້. ແນ່ນອນ ພາລະກິດເທິງແຜ່ນດິນໂລກແມ່ນຖືກເຮັດໃຫ້ສິ້ນສຸດໂດຍຄວາມຮັກສຳລັບພຣະເຈົ້າ. ສະນັ້ນ, ຫຼັງຈາກພຣະເຈົ້າໄດ້ສິ້ນສຸດພາລະກິດຂອງພຣະອົງເທົ່ານັ້ນ ພຣະອົງຈຶ່ງຈະຊີ້ບອກເຖິງພາລະກິດທີ່ສຳຄັນທີ່ສຸດກວ່າທຸກຢ່າງຕໍ່ມະນຸດ. ຖ້າເຖິງເວລາທີ່ພາລະກິດຂອງພຣະອົງສິ້ນສຸດລົງ ພຣະອົງໄດ້ມອບຄວາມຕາຍໃຫ້ແກ່ມະນຸດ ແລ້ວມະນຸດຈະເປັນແບບໃດ, ພຣະເຈົ້າຈະເປັນແບບໃດ ແລະ ຊາຕານຈະເປັນແບບໃດ? ເມື່ອຄວາມຮັກຂອງມະນຸດເທິງແຜ່ນດິນໂລກຖືກນຳອອກມາເທົ່ານັ້ນ ຈຶ່ງຈະສາມາດເວົ້າໄດ້ວ່າ "ພຣະເຈົ້າໄດ້ເອົາຊະນະມະນຸດ". ຖ້າບໍ່ເຊັ່ນນັ້ນ ຜູ້ຄົນຈະເວົ້າວ່າ ພຣະເຈົ້າຂົ່ມເຫັງມະນຸດ ແລະ ດ້ວຍເຫດນັ້ນ ພຣະເຈົ້າຈະຖືກເຮັດໃຫ້ອັບອາຍ. ພຣະເຈົ້າຈະບໍ່ໂງ່ທີ່ຈະເຮັດໃຫ້ພາລະກິດຂອງພຣະອົງສິ້ນສຸດລົງໂດຍບໍ່ມີການກ່າວຂານໃດໆ. ສະນັ້ນ, ເມື່ອພາລະກິດຈະສິ້ນສຸດໃນໄວໆນີ້ ຄື້ນແຫ່ງຄວາມຫຼົງໄຫຼໃນຄວາມຮັກສຳລັບພຣະເຈົ້າກໍຈະເກີດຂຶ້ນ ແລະ ຄວາມຮັກສຳລັບພຣະເຈົ້າຈະກາຍເປັນຫົວຂໍ້ຍອດນິຍົມ. ແນ່ນອນຢູ່ແລ້ວທີ່ຄວາມຮັກສຳລັບພຣະເຈົ້ານີ້ແມ່ນບໍ່ມີຮອຍດ່າງຈາກມະນຸດ,

ມັນເປັນຄວາມຮັກທີ່ບໍລິສຸດ ຄືກັນກັບຄວາມຮັກທີ່ຊື່ສັດຂອງເມຍທີ່ມີຕໍ່ຜົວ ຫຼື ຄວາມຮັກຂອງເປໂຕ. ພຣະເຈົ້າບໍ່ຕ້ອງການຄວາມຮັກແບບໂຢບ ແລະ ໂປໂລ ແຕ່ຕ້ອງການຄວາມຮັກແບບພຣະເຢຊູທີ່ມີຕໍ່ພຣະເຢໂຮວາ ເຊິ່ງເປັນຄວາມຮັກລະຫວ່າງພຣະບິດາ ແລະ ພຣະບຸດ: “ຄຳນຶງເຖິງພຣະບິດາແຕ່ເທົ່ານັ້ນໂດຍບໍ່ພິຈາລະນາເຖິງການສູນເສຍ ຫຼື ຜົນຮັບສ່ວນຕົວ, ເປັນການຮັກພຣະບິດາພຽງຜູ້ດຽວ ແລະ ບໍ່ມີຜູ້ອື່ນ ແລະ ບໍ່ໄດ້ຂໍສິ່ງອື່ນໃດ”. ມະນຸດມີຄວາມສາມາດເຮັດສິ່ງນີ້ໄດ້ບໍ?

ຖ້າພວກເຮົາປຽບທຽບພວກເຈົ້າກັບສິ່ງທີ່ພຣະເຢຊູເຮັດ ທີ່ພຣະອົງບໍ່ມີຄວາມເປັນມະນຸດຢ່າງສົມບູນ? ແລ້ວພວກເຮົາຈະຄິດແນວໃດ? ພວກເຈົ້າມາໃກ້ສໍ່າໃດໃນຄວາມເປັນມະນຸດທີ່ສົມບູນຂອງພວກເຈົ້າ? ພວກເຈົ້າຈະສາມາດໄດ້ຮັບໜຶ່ງສ່ວນສິບຂອງພຣະເຢຊູເຮັດບໍ? ພວກເຈົ້າມີຄຸນສົມບັດທີ່ຈະແບກຫາບໄມ້ກາງແຂນເພື່ອພຣະເຈົ້າບໍ? ຄວາມຮັກສຳລັບພຣະເຈົ້າຂອງພວກເຈົ້າສາມາດນຳເອົາຄວາມອັບອາຍມາໃຫ້ຊາຕານບໍ? ແລ້ວພວກເຈົ້າໄດ້ກຳຈັດຄວາມຮັກຂອງພວກເຈົ້າທີ່ມີຕໍ່ມະນຸດໄດ້ຫຼາຍສໍ່າໃດ? ມັນໄດ້ຖືກແທນໂດຍຄວາມຮັກສຳລັບພຣະເຈົ້າແລ້ວບໍ? ພວກເຈົ້າອົດທົນຕໍ່ທຸກສິ່ງເພື່ອຄວາມຮັກສຳລັບພຣະເຈົ້າແທ້ບໍ? ໃຫ້ຄິດເຖິງເປໂຕຈັກໜ້ອຍ ຜູ້ທີ່ໄດ້ອາໄສໃນອາດີດ ແລ້ວເບິ່ງຕົວເອງທີ່ຢູ່ໃນປັດຈຸບັນ. ຈະເຫັນຄວາມແຕກຕ່າງກັນຫຼາຍ, ພວກເຈົ້າບໍ່ເໝາະສົມທີ່ຈະຢືນຢູ່ຕໍ່ໜ້າພຣະເຈົ້າ. ພວກເຈົ້າ ຮັກພຣະເຈົ້າຫຼາຍກວ່າມານຮ້າຍ ຫຼື ຮັກມານຮ້າຍຫຼາຍກວ່າ? ສິ່ງນີ້ຄວນຖືກວາງຢູ່ດ້ານຊ້າຍ ແລະ ດ້ານຂວາຂອງຊິງ ເພື່ອເບິ່ງວ່າ ສິ່ງໃດຈະສູງກວ່າກັນ. ພວກເຈົ້າຮັກພຣະເຈົ້າແທ້ຈິງສໍ່າໃດ? ພວກເຈົ້າເໝາະສົມທີ່ຈະຕາຍຢູ່ຕໍ່ໜ້າພຣະເຈົ້າບໍ? ເຫດຜົນທີ່ວ່າ ເປັນຫຍັງພຣະເຢຊູຈຶ່ງສາມາດຢືນຢູ່ຕໍ່ໜ້າໄມ້ກາງແຂນກໍຍ້ອນວ່າ ປະສົບການຂອງພຣະອົງຢູ່ເທິງແຜ່ນດິນໂລກແມ່ນພຽງພໍ ທີ່ຈະນຳເອົາຄວາມອັບອາຍມາສູ່ຊາຕານ ແລະ ຍ້ອນເຫດຜົນດັ່ງກ່າວນັ້ນ ພຣະເຈົ້າພຣະບິດາຈຶ່ງອະນຸຍາດຢ່າງກ້າຫານໃຫ້ພຣະອົງເຮັດສຳເລັດຂັ້ນຕອນພາລະກິດ; ມັນເປັນຍ້ອນຄວາມລຳບາກ ທີ່ພຣະອົງໄດ້ທົນທຸກ ແລະ ຄວາມຮັກສຳລັບພຣະເຈົ້າຂອງພຣະອົງ. ແຕ່ພວກເຈົ້າບໍ່ມີຄຸນສົມບັດດັ່ງກ່າວ. ສະນັ້ນ, ພວກເຈົ້າຕ້ອງສືບຕໍ່ມີປະສົບການ, ບັນລຸໃນການມີພຣະເຈົ້າໃນໃຈຂອງພວກເຈົ້າ ແລະ ບໍ່ແມ່ນສິ່ງອື່ນໃດ. ພວກເຈົ້າສາມາດບັນລຸສິ່ງນີ້ບໍ? ຈາກສິ່ງນີ້ມັນສາມາດເຫັນໄດ້ວ່າ ເຈົ້າຊັງພຣະເຈົ້າຫຼາຍສໍ່າໃດ ແລະ ເຈົ້າຮັກພຣະເຈົ້າຫຼາຍສໍ່າໃດ. ບໍ່ແມ່ນວ່າ ພຣະເຈົ້າຮຽກຮ້ອງຈາກມະນຸດຫຼາຍ ແຕ່ມະນຸດບໍ່ໄດ້ພະຍາຍາມເອງ. ນີ້ບໍ່ແມ່ນສະຖານະການຕົວຈິງບໍ? ຖ້າບໍ່ແມ່ນ ແລ້ວຄວາມຮັກສຳລັບພຣະເຈົ້າ ທີ່ເຈົ້າຄົ້ນພົບໃນຕົວເຈົ້າມີຫຼາຍສໍ່າໃດ ແລະ ຄວາມກຽດຊັງທີ່ເຈົ້າພົບເຫັນໃນຕົວເຈົ້າມີຫຼາຍສໍ່າໃດ? ເຈົ້າຄວນພິຈາລະນາສິ່ງເຫຼົ່ານີ້ຢ່າງໃກ້ຊິດ. ມັນຍຸຕິທຳແລ້ວທີ່ຈະເວົ້າວ່າ ມີພຽງບາງຄົນທີ່ຢູ່ກ້ອງສະຫວັນທີ່ຮັກພຣະເຈົ້າ ແຕ່ເຈົ້າສາມາດເປັນຜູ້ລິເລີ່ມໄດ້ບໍ ໃນການທຳລາຍສະຖິຕິໂລກ ແລະ ຮັກພຣະເຈົ້າ? ພຣະເຈົ້າບໍ່ຂໍຫຍັງຈາກມະນຸດ. ມະນຸດບໍ່ສາມາດໃຫ້ກຽດແກ່ພຣະອົງໃນສິ່ງນີ້ໄດ້ບໍ? ເຈົ້າບໍ່ສາມາດບັນລຸແມ່ນແຕ່ສິ່ງນີ້ບໍ? ມີຫຍັງແດ່ທີ່ຈະຕ້ອງເວົ້າອີກ?

# ບົດທີ 46

ໃນບັນດາພຣະທຳເຫຼົ່ານີ້, ບໍ່ມີຂໍ້ໃດທີ່ບໍ່ສາມາດລືມໄດ້ຫຼາຍໄປກວ່າພຣະທຳໃນປັດຈຸບັນ. ທີ່ຜ່ານມາ ພຣະທຳຂອງພຣະເຈົ້າໄດ້ເປີດເຜີຍສະພາວະຂອງມະນຸດ ຫຼື ຄວາມເລິກລັບແຫ່ງສະຫວັນ, ແຕ່ຖ້ອຍຄຳປັດຈຸບັນນີ້ກໍບໍ່ຄືກັບຖ້ອຍຄຳທີ່ຢູ່ໃນອະດີດ. ມັນບໍ່ໄດ້ເຍາະເຍີ້ຍ ຫຼື ຫົວຂວັນໃສ່, ແຕ່ເປັນສິ່ງທີ່ບໍ່ໄດ້ຄາດຫວັງໄວ້ແທ້ໆ: ພຣະເຈົ້ານັ່ງລົງ ແລະ ລົມກັບຜູ້ຄົນຢ່າງງຽບໆ. ເຈດຕະນາຂອງພຣະອົງແມ່ນຫຍັງ? ເຈົ້າເຫັນຫຍັງເມື່ອພຣະເຈົ້າເວົ້າວ່າ "ໃນປັດຈຸບັນ, ເຮົາໄດ້ເລີ່ມຕົ້ນພາລະກິດໃໝ່ເໜືອຈັກກະວານ. ເຮົາໄດ້ມອບການເລີ່ມຕົ້ນໃໝ່ໃຫ້ກັບຜູ້ຄົນຢູ່ເທິງແຜ່ນດິນໂລກ ແລະ ເຮົາຂໍໃຫ້ພວກເຂົາທຸກຄົນຍ້າຍອອກຈາກເຮືອນຂອງເຮົາ. ຍ້ອນຜູ້ຄົນມັກໃສ່ໃຈພວກເຂົາເອງຢູ່ສະເໝີ, ເຮົາຈຶ່ງແນະນຳໃຫ້ພວກເຂົາຮູ້ຈັກຖານະຕົນເອງ ແລະ ບໍ່ລົບກວນພາລະກິດຂອງເຮົາຢູ່ຕະຫຼອດ"? ແລ້ວແມ່ນຫຍັງຄື "ການເລີ່ມຕົ້ນໃໝ່" ນີ້ທີ່ພຣະເຈົ້າກ່າວເຖິງ? ຜ່ານມາ ພຣະເຈົ້າກໍໄດ້ແນະນຳໃຫ້ຜູ້ຄົນໜີໄປ, ແຕ່ຕອນນັ້ນ ເຈດຕະນາຂອງພຣະເຈົ້າແມ່ນເພື່ອທົບສອບຄວາມເຊື່ອຂອງພວກເຂົາ. ສະນັ້ນ ໃນປັດຈຸບັນເມື່ອພຣະອົງເວົ້າໃນນໍ້າສຽງຕ່າງເກົ່າ, ພຣະອົງເປັນຈິງ ຫຼື ຈອມປອມ? ກ່ອນໜ້ານີ້, ຜູ້ຄົນບໍ່ຮູ້ຈັກເຖິງການທົດລອງທີ່ພຣະເຈົ້າກ່າວເຖິງ. ພຽງແຕ່ຜ່ານຂັ້ນຕອນຂອງພາລະກິດຂອງຜູ້ບໍລິການ ຕາຂອງພວກເຂົາຈຶ່ງເຫັນ ແລະ ພວກເຂົາຈຶ່ງຜະເຊີນການທົດລອງຂອງພຣະເຈົ້າເປັນການສ່ວນຕົວ. ສະນັ້ນຕັ້ງແຕ່ເວລານັ້ນເປັນຕົ້ນມາ ເນື່ອງຈາກຕົວຢ່າງຂອງການທົດລອງຫຼາຍຮ້ອຍຄັ້ງຂອງເປໂຕ, ຜູ້ຄົນຈຶ່ງເຂົ້າໃຈຜິດຢູ່ສະເໝີ ໂດຍເຊື່ອວ່າ "ມັນເປັນການທົດລອງຂອງພຣະເຈົ້າ". ຍິ່ງໄປກວ່ານັ້ນ ໃນພຣະທຳຂອງພຣະເຈົ້າ ຄວາມຈິງໄດ້ເກີດຂຶ້ນໜ້ອຍທີ່ສຸດ. ເມື່ອເປັນດັ່ງນັ້ນ ຜູ້ຄົນຈຶ່ງຍິ່ງຈົມເລິກລົງໄປໃນຄວາມເຊື່ອທີ່ງົມງວາຍຫຼາຍກວ່າເກົ່າກ່ຽວກັບການທົດລອງຂອງພຣະເຈົ້າ ແລະ ສະນັ້ນ ໃນພຣະທຳທຸກຂໍ້ທີ່ພຣະເຈົ້າກ່າວ ພວກເຂົາບໍ່ເຄີຍເຊື່ອວ່ານີ້ເປັນພາລະກິດແຫ່ງຄວາມຈິງທີ່ພຣະເຈົ້າໄດ້ປະຕິບັດ; ກົງກັນຂ້າມ ພວກເຂົາເຊື່ອວ່າ ພຣະເຈົ້າບໍ່ມີຫຍັງເຮັດ ເລີຍໃຊ້ພຣະທຳເພື່ອທົດສອບມະນຸດໂດຍສະເພາະ. ມັນແມ່ນທ່າມກາງການທົດລອງດັ່ງກ່າວ ເຊິ່ງສ້າງຄວາມສິ້ນຫວັງ ແລະ ພ້ອມນັ້ນ ກໍເບິ່ງຄືກັບວ່າໃຫ້ຄວາມຫວັງ, ຜູ້ຄົນຈຶ່ງຕິດຕາມ ແລະ ສະນັ້ນ ຫຼັງຈາກທີ່ພຣະເຈົ້າເວົ້າວ່າ "ທຸກຄົນທີ່ຄົງຢູ່ອາດຈະທົນທຸກກັບຄວາມໂຊກຮ້າຍ ແລະ ຄວາມໂຊກດີເລັກນ້ອຍ", ຜູ້ຄົນກໍຍັງອຸທິດຄວາມສົນໃຈຂອງພວກເຂົາໃນການຕິດຕາມ ແລະ ດ້ວຍເຫດນັ້ນກໍບໍ່ມີເຈດຕະນາທີ່ຈະໜີໄປ. ຜູ້ຄົນຕິດຕາມໃນທ່າມກາງພາບລວງຕາດັ່ງກ່າວ ແລະ ບໍ່ມີພວກເຂົາແມ່ນແຕ່ຄົນດຽວທີ່ກ້າໝັ້ນໃຈໄດ້ວ່າ ສິ່ງນີ້ບໍ່ມີຄວາມຫວັງ ເຊິ່ງນີ້ເປັນສ່ວນໜຶ່ງຂອງການພິສູດໃຫ້ເຫັນເຖິງໄຊຊະນະຂອງພຣະເຈົ້າ. ມຸມມອງຂອງພຣະເຈົ້າສະແດງໃຫ້ເຫັນວ່າພຣະອົງວາງແຜນໃຫ້ທຸກຄົນຮັບໃຊ້ພຣະອົງ. ພາບລວງຕາຂອງຜູ້ຄົນສົ່ງເສີມໃຫ້ພວກເຂົາບໍ່ໜີຈາກພຣະເຈົ້າ, ບໍ່ວ່າຈະເປັນເວລາໃດ ຫຼື ສະຖານທີ່ໃດກໍຕາມ ແລະ ສະນັ້ນໃນລະຫວ່າງຂັ້ນຕອນນີ້ ພຣະເຈົ້າຈຶ່ງໃຊ້ຄວາມບໍ່ສົມບູນຂອງຜູ້ຄົນເປັນແຮງຜັກດັນເພື່ອເຮັດໃຫ້ພວກເຂົາປະຈັກພະຍານໃຫ້ກັບພຣະອົງ ເຊິ່ງເປັນຄວາມໝາຍທີ່ເລິກເຊິ່ງເມື່ອພຣະເຈົ້າເວົ້າວ່າ "ເຮົາໄດ້

ຮັບເອົາຄືນບາງສ່ວນ". ຊາຕານໃຊ້ແຮງຜັກດັນຂອງມະນຸດເພື່ອສ້າງຄວາມປັ່ນປ່ວນ, ໃນຂະນະທີ່ພຣະເຈົ້າໃຊ້ແຮງຜັກດັນຂອງມະນຸດເພື່ອເຮັດໃຫ້ເຂົາຮັບໃຊ້ ເຊິ່ງນີ້ເປັນຄວາມໝາຍແທ້ຈິງໃນພຣະທຳຂອງພຣະເຈົ້າທີ່ວ່າ "ຜູ້ຄົນຈິນຕະນາການວ່າ ພວກເຂົາສາມາດໃຊ້ອຸບາຍເພື່ອຫາທາງເຂົ້າ, ແຕ່ເມື່ອພວກເຂົາຍື່ນບັດຜ່ານເຂົ້າປະຕູປອມຂອງພວກເຂົາໃຫ້ກັບເຮົາ, ເຮົາກໍໂຍນພວກເຂົາຖິ້ມໃນຂຸມໄຟໃນທີ່ນັ້ນ ແລະ ຫຼັງຈາກນັ້ນ ເມື່ອໄດ້ເຫັນເຖິງ 'ຄວາມພະຍາຍາມຢ່າງເຈັບປວດ' ຂອງພວກເຂົາເອງເຜົາໄໝ້, ພວກເຂົາກໍສູນເສຍຄວາມຫວັງ". ພຣະເຈົ້າວາງແຜນທຸກສິ່ງເພື່ອເຮັດໃຫ້ພວກເຂົາຮັບໃຊ້ ແລະ ສະນັ້ນພຣະເຈົ້າຈຶ່ງຫຼີກເວັ້ນຄວາມຄິດເຫັນທີ່ຫຼາກຫຼາຍຂອງມະນຸດ, ແຕ່ບອກຢ່າງກ້າຫານໃຫ້ຜູ້ຄົນຈາກໄປ; ນີ້ແມ່ນຄວາມມະຫັດສະຈັນ ແລະ ສະຕິປັນຍາແຫ່ງພາລະກິດຂອງພຣະເຈົ້າ, ຮວບຮວມເອົາຖ້ອຍຄຳທີ່ສັດຊື່ ແລະ ວິທີການເຂົ້າເປັນໜຶ່ງດຽວ, ແລ້ວປ່ອຍໃຫ້ຜູ້ຄົນມຶນງົງ ແລະ ບໍ່ຮູ້ທາງໄປ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ພຣະເຈົ້າກຳລັງຮຽກຮ້ອງໃຫ້ຜູ້ຄົນຍ້າຍອອກຈາກເຮືອນຂອງພຣະອົງຢ່າງແທ້ຈິງ, ສິ່ງນີ້ບໍ່ແມ່ນການທົດລອງບາງຢ່າງ ແລະ ພຣະເຈົ້າກໍໃຊ້ໂອກາດນີ້ເພື່ອເວົ້າວ່າ "ແຕ່ເຮົາຍັງບອກຜູ້ຄົນວ່າເມື່ອພວກເຂົາລົ້ມເຫຼວໃນການຮັບພອນ, ບໍ່ມີໃຜສາມາດຕໍ່ວ່າເຮົາໄດ້". ບໍ່ມີໃຜເຂົ້າໃຈວ່າພຣະທຳຂອງພຣະເຈົ້າເປັນຈິງ ຫຼື ຈອມປອມ, ແຕ່ພຣະເຈົ້າກໍໃຊ້ໂອກາດນີ້ເພື່ອເຮັດໃຫ້ຜູ້ຄົນໝັ້ນຄົງ, ເພື່ອກຳຈັດຄວາມປາຖະໜາຢາກໝົດອອກຈາກໃຈພວກເຂົາ. ສະນັ້ນ ຖ້າມື້ໜຶ່ງ ພວກເຂົາຖືກສາບແຊ່ງ, ພວກເຂົາກໍຈະຖືກເຕືອນລ່ວງໜ້າໂດຍພຣະທຳຂອງພຣະເຈົ້າ, ຄືກັບທີ່ຜູ້ຄົນເວົ້າວ່າ "ຄຳເວົ້າທີ່ບໍ່ມ່ວນຕໍ່ຫູແມ່ນຄຳເວົ້າທີ່ຫວັງດີ". ໃນປັດຈຸບັນ, ຄວາມຮັກຂອງຜູ້ຄົນສຳລັບພຣະເຈົ້າແມ່ນຈິງຈັງ ແລະ ຈິງໃຈ ແລະ ສະນັ້ນ ພວກເຂົາຈຶ່ງບໍ່ສາມາດບອກໄດ້ວ່າໃນພຣະທຳນັ້ນເປັນຈິງ ຫຼື ຈອມປອມ, ພວກເຂົາຖືກເອົາຊະນະ ແລະ ມາຮັກພຣະເຈົ້າ ດ້ວຍເຫດນັ້ນພຣະເຈົ້າຈຶ່ງກ່າວວ່າ "ເຮົາໄດ້ເຮັດໃຫ້ພາລະກິດທີ່ຍິ່ງໃຫຍ່ຂອງເຮົາສຳເລັດແລ້ວ". ເມື່ອພຣະເຈົ້າເວົ້າວ່າ "ເຮົາຫວັງວ່າພວກເຂົາຈະຄົ້ນພົບເສັ້ນທາງຂອງພວກເຂົາເອງໃນການຢູ່ລອດ. ເຮົາບໍ່ມີອຳນາດໃນສິ່ງນີ້", ສິ່ງນີ້ກໍຄືຄວາມເປັນຈິງແຫ່ງຖ້ອຍຄຳຂອງພຣະເຈົ້າໃນບັນດາພຣະທຳເຫຼົ່ານີ້ທັງໝົດ, ແຕ່ຜູ້ຄົນກໍບໍ່ໄດ້ຄິດແບບນັ້ນ; ກົງກັນຂ້າມ ພວກເຂົາໄດ້ຕິດຕາມໂດຍບໍ່ໃສ່ໃຈພຣະທຳຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ. ດັ່ງນັ້ນ ເມື່ອພຣະເຈົ້າເວົ້າວ່າ "ໃນອະນາຄົດກໍຈະບໍ່ມີພຣະທຳລະຫວ່າງເຮົາອີກຕໍ່ໄປ, ພວກເຮົາຈະບໍ່ມີຫຍັງໃຫ້ເວົ້າອີກຕໍ່ໄປ, ພວກເຮົາຈະບໍ່ແຊກແຊງກັນ ແລະ ກັນ, ພວກເຮົາແຕ່ລະຄົນຈະໄປຕາມທາງຂອງພວກເຮົາເອງ", ພຣະທຳເຫຼົ່ານີ້ກໍເປັນຄວາມຈິງ ແລະ ບໍ່ມີມົນທິນແມ່ນແຕ່ໜ້ອຍດຽວ. ບໍ່ວ່າມະນຸດຈະຄິດຫຍັງກໍຕາມ ເຊັ່ນ "ຄວາມບໍ່ມີເຫດຜົນ" ຂອງພຣະເຈົ້າ. ພຣະເຈົ້າໄດ້ເປັນພະຍານຕໍ່ໜ້າຊາຕານແລ້ວ ແລະ ພຣະເຈົ້າກໍເວົ້າວ່າພຣະອົງຈະເຮັດໃຫ້ທຸກຄົນບໍ່ປະຖິ້ມພຣະເຈົ້າ ບໍ່ວ່າຈະເປັນເວລາໃດ ຫຼື ສະຖານທີ່ໃດ ແລະ ດ້ວຍເຫດນັ້ນ ຂັ້ນຕອນນີ້ແຫ່ງພາລະກິດຈຶ່ງຖືກເຮັດໃຫ້ສຳເລັດ ແລະ ພຣະເຈົ້າກໍບໍ່ໄດ້ໃສ່ໃຈກັບຄຳຕໍ່ວ່າຂອງມະນຸດ. ແຕ່ພຣະເຈົ້າໄດ້ເຮັດໃຫ້ສິ່ງນີ້ຊັດເຈນຕັ້ງແຕ່ເລີ່ມຕົ້ນແລ້ວ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຶ່ງຖືກຖິ້ມບໍ່ໃຫ້ມີທາງເລືອກ, ຖືກບັງຄັບໃຫ້ກືນກິນຄວາມໃຈຮ້າຍ ແລະ ປິດປາກງຽບ. ສົງຄາມລະຫວ່າງພຣະເຈົ້າ ແລະ ຊາຕານກໍອີງຕາມມະນຸດທັງສິ້ນ. ຜູ້ຄົນບໍ່ສາມາດຄວບຄຸມເໜືອຕົນເອງ, ພວກເຂົາເປັນ ຫຸ່ນຕຸກກະຕາທີ່ດີແທ້ໆ,

ໃນຂະນະທີ່ພຣະເຈົ້າ ແລະ ຊາຕານເປັນຜູ້ຊັກໃຍຢູ່ເບື້ອງຫຼັງສາກ. ເມື່ອພຣະເຈົ້າໃຊ້ຜູ້ຄົນເພື່ອເປັນພະຍານໃຫ້ກັບພຣະອົງ, ພຣະອົງກໍເຮັດທຸກສິ່ງທີ່ພຣະອົງສາມາດຄິດອອກ, ທຸກສິ່ງທີ່ເປັນໄປໄດ້, ເພື່ອໃຊ້ຜູ້ຄົນໃຫ້ຮັບໃຊ້ພຣະອົງ, ເຮັດໃຫ້ຜູ້ຄົນຖືກຊາຕານຫຼອກໃຊ້ ແລະ ຍິ່ງໄປກວ່ານັ້ນກໍຄື ຖືກຊີ້ນໍາໂດຍພຣະເຈົ້າ. ແລ້ວເມື່ອຄໍາພະຍານທີ່ພຣະເຈົ້າປາຖະໜາຢາກໃຫ້ເກີດຂຶ້ນໄດ້ສໍາເລັດລົງ, ພຣະອົງກໍໂຍນຜູ້ຄົນຖິ້ມໄວ້ທາງຂ້າງ ແລະ ປ່ອຍໃຫ້ພວກເຂົາທົນທຸກ, ໃນຂະນະດຽວກັນ ພຣະເຈົ້າເຮັດຄືກັບວ່າພຣະອົງບໍ່ມີສ່ວນກ່ຽວຂ້ອງຫຍັງກັບພວກເຂົາເລີຍ. ເມື່ອພຣະອົງປາຖະໜາທີ່ຈະໃຊ້ຜູ້ຄົນ, ພຣະອົງກໍເກັບພວກເຂົາຂຶ້ນມາອີກຄັ້ງ ແລະ ນໍາໃຊ້ພວກເຂົາ ແລະ ຜູ້ຄົນກໍຈະບໍ່ຮູ້ກ່ຽວກັບສິ່ງນີ້ແມ່ນແຕ່ໜ້ອຍດຽວ. ພວກເຂົາເປັນພຽງງົວ ຫຼື ມ້າທີ່ຖືກເຈົ້ານາຍຂອງມັນໃຊ້ຕາມທີ່ເຂົາພໍໃຈ, ບໍ່ມີພວກມັນໂຕໃດທີ່ສາມາດຄວບຄຸມເໜືອຕົນເອງໄດ້. ສິ່ງນີ້ອາດຟັງເບິ່ງຄືກັບວ່າເສົ້າ, ແຕ່ບໍ່ວ່າຜູ້ຄົນສາມາດຄວບຄຸມເໜືອຕົນເອງ ຫຼື ບໍ່, ການຮັບໃຊ້ພຣະເຈົ້າແມ່ນຖືວ່າເປັນກຽດ, ບໍ່ແມ່ນສິ່ງທີ່ຕ້ອງເສຍໃຈນໍາ. ມັນເປັນສິ່ງທີ່ພຣະເຈົ້າຄວນປະຕິບັດໃນລັກສະນະນີ້. ການທີ່ສາມາດປະຕິບັດຕາມຄວາມຕ້ອງການຂອງອົງຊົງລິດທານຸພາບສູງສຸດບໍ່ແມ່ນສິ່ງທີ່ຄວນພູມໃຈບໍ? ແລ້ວເຈົ້າຄິດແນວໃດ? ເຈົ້າເຄີຍຕັ້ງໃຈທີ່ຈະຮັບໃຊ້ພຣະເຈົ້າບໍ? ເປັນໄປໄດ້ບໍວ່າ ເຈົ້າຍັງປາຖະໜາທີ່ຈະຍຶດຖືສິດໃນການຄົ້ນຫາອິດສະຫຼະພາບຂອງເຈົ້າເອງ?

ບໍ່ວ່າຫຍັງກໍຕາມ, ທຸກສິ່ງທີ່ພຣະເຈົ້າເຮັດແມ່ນດີ ແລະ ສົມຄວນແກ່ການເອົາເປັນແບບຢ່າງ ແລະ ໃນທີ່ສຸດແລ້ວ ມະນຸດ ແລະ ພຣະເຈົ້າແມ່ນແຕກຕ່າງກັນ. ເຈົ້າຄວນຮັກພຣະເຈົ້າດ້ວຍຫົວໃຈຂອງມະນຸດບົນພື້ນຖານນີ້ ບໍ່ວ່າພຣະເຈົ້າຈະສົນໃຈຄວາມຮັກຂອງເຈົ້າ ຫຼື ບໍ່. ພຣະທໍາຂອງພຣະເຈົ້າສະແດງໃຫ້ເຫັນວ່າ ຍັງມີຄວາມໂສກເສົ້າຢ່າງໃຫຍ່ຫຼວງຢູ່ພາຍໃນຫົວໃຈຂອງພຣະເຈົ້າ. ເປັນຍ້ອນພຣະທໍາຂອງພຣະເຈົ້າເທົ່ານັ້ນ ຜູ້ຄົນຈຶ່ງຖືກຫຼົ່ຫຼອມ. ແຕ່ໃນຄວາມເປັນຈິງແລ້ວ ພາລະກິດນີ້ໄດ້ເກີດຂຶ້ນມື້ວານນີ້ ແລະ ສະນັ້ນ ພຣະເຈົ້າຈະເຮັດຫຍັງແທ້ຕໍ່ໄປ? ສິ່ງນີ້ຍັງເປັນຄວາມລັບຈົນຮອດທຸກມື້ນີ້ ແລະ ສະນັ້ນ ຜູ້ຄົນຈຶ່ງບໍ່ສາມາດເຂົ້າໃຈ ຫຼື ຢັ່ງເຖິງມັນໄດ້ ແລະ ສາມາດພຽງແຕ່ຮ້ອງເພງຕາມດົນຕີຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ ທຸກສິ່ງທີ່ພຣະເຈົ້າເວົ້າແມ່ນເປັນຈິງ ແລະ ມັນກາຍເປັນຈິງທັງໝົດ, ສິ່ງນີ້ບໍ່ຕ້ອງສົງໄສເລີຍ!

# ພາກທີສາມ

# ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ

(ມິຖຸນາ 1992 ຫາ ວັນທີ 23 ມີນາ 2010)

# ບົດນຳ

ພຣະທຳຂອງພຣະເຈົ້າສ່ວນນີ້ມີທັງໝົດສີ່ພາກທີ່ລ້ວນແລ້ວແຕ່ຖືກກ່າວໂດຍພຣະຄຣິດ ໃນລະຫວ່າງເດືອນມິຖຸນາ 1992 ແລະ ວັນທີ 23 ມີນາ 2010. ພຣະທຳສ່ວນໃຫຍ່ແມ່ນອີງໃສ່ການບັນທຶກຄຳເທດສະນາ ແລະ ການສົນທະນາຂອງພຣະຄຣິດ ໃນຂະນະທີ່ພຣະອົງເດີນທາງໄປທົ່ວຄຣິສຕະຈັກຕ່າງໆ. ພຣະທຳເຫຼົ່ານີ້ບໍ່ໄດ້ຖືກແກ້ໄຂໃນລັກສະນະໃດໜຶ່ງ ຫຼື ຖືກປ່ຽນແປງໂດຍພຣະຄຣິດໃນເວລາຕໍ່ມາ. ພາກສ່ວນທີ່ເຫຼືອແມ່ນຖືກຂຽນຂຶ້ນໂດຍພຣະຄຣິດເອງ (ເມື່ອພຣະຄຣິດຂຽນ, ພຣະອົງກໍສືບຕໍ່ຂຽນຢ່າງຕໍ່ເນື່ອງ ໂດຍບໍ່ໄດ້ເຊົາເພື່ອຈະຄິດ ຫຼື ດຳເນີນການແກ້ໄຂໃດໆ ແລະ ພຣະທຳຂອງພຣະອົງແມ່ນຖ້ອຍຄຳຂອງພຣະວິນຍານບໍລິສຸດທັງສິ້ນ, ສິ່ງນີ້ແມ່ນຢູ່ນອກເໜືອຂໍ້ສົງໄສທຸກປະການ). ແທນທີ່ຈະແຍກພຣະຄຳທັງສອງປະເພດນີ້ອອກ, ພວກເຮົາໄດ້ນຳສະເໜີພຣະທຳເຫຼົ່ານີ້ລວມກັນ ໂດຍໃຊ້ລຳດັບເດີມຂອງການກ່າວພຣະທຳເຫຼົ່ານັ້ນ; ຈາກພຣະຄຳທັງໝົດຂອງພຣະອົງ, ສິ່ງນີ້ເຮັດໃຫ້ພວກເຮົາເຫັນເຖິງບາດກ້າວຂອງພາລະກິດຂອງພຣະເຈົ້າ ແລະ ເຂົ້າໃຈເຖິງວິທີທີ່ພຣະອົງປະຕິບັດພາລະກິດໃນແຕ່ລະໄລຍະ ເຊິ່ງເປັນປະໂຫຍດຕໍ່ຄວາມຮູ້ຂອງຜູ້ຄົນກ່ຽວກັບບາດກ້າວຂອງພາລະກິດຂອງພຣະເຈົ້າ ແລະ ສະຕິປັນຍາຂອງພຣະເຈົ້າ.

ແປດບົດທຳອິດຂອງໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ I" ເຊິ່ງເອີ້ນລວມກັນວ່າ "ເສັ້ນທາງ" ແມ່ນພາກສ່ວນເລັກນ້ອຍຂອງພຣະທຳທີ່ພຣະຄຣິດໄດ້ກ່າວ ໃນຂະນະທີ່ພຣະອົງຢືນຢ່າງເທົ່າທຽມກັບມະນຸດ. ເຖິງແມ່ນພຣະທຳເຫຼົ່ານີ້ເບິ່ງຄືກັບວ່າໜ້າເບື່ອ, ພວກມັນກໍເຕັມໄປດ້ວຍຄວາມຮັກຂອງພຣະເຈົ້າ ແລະ ຄວາມຫ່ວງໃຍສຳລັບມະນຸດຊາດ. ກ່ອນໜ້ານີ້, ພຣະເຈົ້າໄດ້ກ່າວຈາກທັດສະນະຂອງສະຫວັນຊັ້ນສາມ ເຊິ່ງໄດ້ສ້າງຄວາມຫ່າງໄກຢ່າງໃຫຍ່ຫຼວງລະຫວ່າງພຣະອົງກັບມະນຸດ ແລະ ເຮັດໃຫ້ຜູ້ຄົນຢ້ານທີ່ຈະເຂົ້າຫາພຣະເຈົ້າ, ແລ້ວແຮງໄກທີ່ຈະຂໍໃຫ້ພຣະອົງສະໜອງຊີວິດໃຫ້ແກ່ພວກເຂົາ. ສະນັ້ນ ໃນໜັງສື "ເສັ້ນທາງ", ພຣະເຈົ້າຈຶ່ງກ່າວຕໍ່ມະນຸດດັ່ງຄົນເທົ່າທຽມກັນ ແລະ ຊີ້ໃຫ້ເຫັນເຖິງທິດທາງ ເພື່ອຟື້ນຟູຄວາມສຳພັນຂອງມະນຸດກັບພຣະເຈົ້າຄືນສູ່ສະພາວະດັ່ງເດີມ; ຜູ້ຄົນບໍ່ສົງໄສອີກຕໍ່ໄປວ່າພຣະເຈົ້າຈະຍັງໃຊ້ວິທີການເວົ້າ ແລະ ບໍ່ຖືກຫຼອກຫຼອນດ້ວຍຄວາມຢ້ານກົວຈາກການທົດລອງແຫ່ງຄວາມຕາຍອີກຕໍ່ໄປ. ພຣະເຈົ້າລົງມາຈາກສະຫວັນຊັ້ນສາມສູ່ແຜ່ນດິນໂລກ, ຜູ້ຄົນມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ ຈາກທະເລສາບແຫ່ງໄຟ ແລະ ມາດ, ພວກເຂົາໂຍນຖິ້ມວິນຍານແຫ່ງ "ຜູ້ບໍລິການ" ແລະ ເຊັ່ນດຽວກັບລູກງົວທີ່ຫາກໍເກີດໃໝ່, ພວກເຂົາຍອມການຮັບບັບຕິດສະມາແຫ່ງພຣະທຳຂອງພຣະເຈົ້າຢ່າງເປັນທາງການ. ມີແຕ່ເມື່ອນັ້ນ ພຣະເຈົ້າຈຶ່ງສາມາດລົມກັບພວກເຂົາໄດ້ຢ່າງໃກ້ຊິດ ແລະ ປະຕິບັດພາລະກິດແຫ່ງການສະໜອງຊີວິດໃຫ້ກັບພວກເຂົາໄດ້ຫຼາຍຂຶ້ນ. ເປົ້າໝາຍທີ່ພຣະເຈົ້າຖ່ອມຕົວພຣະອົງເອງເປັນມະນຸດກໍເພື່ອໃຫ້ພຣະອົງໄດ້ໃກ້ຊິດກັບຜູ້ຄົນຫຼາຍຂຶ້ນ, ຕັດຄວາມຫ່າງໄກລະຫວ່າງພວກເຂົາ ແລະ ພຣະອົງ, ເຮັດໃຫ້ພຣະອົງໄດ້ຮັບການຍອມຮັບ ແລະ ຄວາມໄວ້ວາງໃຈຂອງຜູ້ຄົນ ແລະ ດົນບັນດານໃຫ້ຜູ້ຄົນມີຄວາມເຊື່ອໝັ້ນທີ່

ຈະສະແຫວງຊີວິດ ແລະ ຕິດຕາມພຣະເຈົ້າ. ແປດບົດຂອງໜັງສື "ເສັ້ນທາງ" ສາມາດສະຫຼຸບໄດ້ວ່າເປັນກະແຈສຳຄັນທີ່ພຣະເຈົ້າໃຊ້ເພື່ອເປີດປະຕູສູ່ຫົວໃຈຂອງຜູ້ຄົນ ແລະ ເມື່ອຮວມເຂົ້າກັນ ພວກມັນໄດ້ກາຍເປັນເມັດຢາເຄືອບນໍ້າຕານທີ່ພຣະອົງມອບໃຫ້ແກ່ມະນຸດ. ມີພຽງແຕ່ພຣະເຈົ້າເຮັດແບບນີ້ເທົ່ານັ້ນ, ຜູ້ຄົນຈຶ່ງຈະສາມາດໃຫ້ຄວາມສົນໃຈຢ່າງໃກ້ຊິດກັບການສັ່ງສອນ ແລະ ການຕຳນິຊໍ້າແລ້ວຊໍ້າເລົ່າຂອງພຣະເຈົ້າ. ສາມາດເວົ້າໄດ້ວ່າ ມີພຽງແຕ່ຫຼັງຈາກສິ່ງນີ້ເທົ່ານັ້ນ ພຣະເຈົ້າຈຶ່ງເລີ່ມຕົ້ນພາລະກິດແຫ່ງການສະໜອງຊີວິດ ແລະ ກ່າວຄວາມຈິງຢ່າງໃນຂັ້ນຕອນປັດຈຸບັນຂອງພາລະກິດຢ່າງເປັນທາງການ, ດັ່ງທີ່ພຣະອົງສືບຕໍ່ກ່າວວ່າ: "ຜູ້ເຊື່ອຄວນມີມຸມມອງແບບໃດ" ແລະ "ກ່ຽວກັບຂັ້ນຕອນຂອງພາລະກິດຂອງພຣະເຈົ້າ"... ວິທີການດັ່ງກ່າວບໍ່ໄດ້ສະແດງເຖິງສະຕິປັນຍາຂອງພຣະເຈົ້າ ແລະ ເຈດຕະນາອັນຈິງຈັງຂອງພຣະອົງບໍ? ນີ້ແມ່ນຈຸດເລີ່ມຕົ້ນທີ່ພຣະຄຣິດສະໜອງຊີວິດ, ສະນັ້ນ ຄວາມຈິງຈຶ່ງຂ້ອນຂ້າງຕື້ນກວ່າພາກສ່ວນທີ່ຕາມມາ. ຫຼັກການເບື້ອງຫຼັງສິ່ງນີ້ແມ່ນງ່າຍຫຼາຍ: ພຣະເຈົ້າປະຕິບັດພາລະກິດຕາມຄວາມຕ້ອງການຂອງມະນຸດຊາດ. ພຣະອົງບໍ່ປະຕິບັດ ຫຼື ກ່າວຢ່າງລັບຫູລັບຕາ; ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ເຂົ້າໃຈຄວາມຕ້ອງການຂອງມະນຸດຊາດຢ່າງແທ້ຈິງ ແລະ ບໍ່ມີຜູ້ໃດທີ່ມີຄວາມຮັກທີ່ຍິ່ງໃຫຍ່ ແລະ ຄວາມເຂົ້າໃຈສຳລັບມະນຸດ.

ໃນພຣະຄຳຂໍ້ທີໜຶ່ງຫາສິບໃນໜັງສື "ພາລະກິດ ແລະ ທາງເຂົ້າ", ພຣະທຳຂອງພຣະເຈົ້າໄດ້ເຂົ້າສູ່ໄລຍະໃໝ່. ດ້ວຍເຫດນັ້ນ ພຣະຄຳເຫຼົ່ານີ້ຈຶ່ງຖືກວາງໄວ້ໃນຕອນຕົ້ນ. ຕໍ່ມາ ໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ II" ຈຶ່ງໄດ້ເກີດຂຶ້ນ. ໃນລະຫວ່າງຂັ້ນຕອນນີ້, ພຣະເຈົ້າໄດ້ຮຽກຮ້ອງຜູ້ຕິດຕາມຂອງພຣະອົງ ຢ່າງລະອຽດຫຼາຍຂຶ້ນ, ການຮຽກຮ້ອງທີ່ລວມເຖິງຄວາມຮູ້ກ່ຽວກັບວິທີການໃຊ້ຊີວິດຂອງຜູ້ຄົນ, ສິ່ງທີ່ຈຳເປັນກ່ຽວກັບຄວາມສາມາດຂອງພວກເຂົາ ແລະ ອື່ນໆ. ຍ້ອນຜູ້ຄົນເຫຼົ່ານີ້ຕັ້ງໃຈທີ່ຈະຕິດຕາມພຣະເຈົ້າ ແລະ ບໍ່ມີຂໍ້ສົງໄສອີກຕໍ່ໄປກ່ຽວກັບຕົວຕົນ ແລະ ແກ່ນແທ້ຂອງພຣະເຈົ້າ, ພຣະເຈົ້າຍັງເລີ່ມຕົ້ນປະຕິບັດຕໍ່ພວກເຂົາດັ່ງສະມາຊິກໃນຄອບຄົວຂອງພຣະອົງເອງຢ່າງເປັນທາງການ, ສົນທະນາກ່ຽວກັບເບື້ອງຫຼັງພາລະກິດຂອງພຣະເຈົ້າຕັ້ງແຕ່ການເນລະມິດສ້າງຈົນເຖິງປັດຈຸບັນ, ເປີດເຜີຍຄວາມຈິງທີ່ຢູ່ເບື້ອງຫຼັງພຣະຄຳພີ ແລະ ສັ່ງສອນພວກເຂົາເຖິງຄວາມສຳຄັນທີ່ແທ້ຈິງຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ພຣະຄຳຂອງພຣະເຈົ້າໃນພາກສ່ວນນີ້ໄດ້ມອບຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບແກ່ນແທ້ຂອງພຣະເຈົ້າແກ່ຜູ້ຄົນ ແລະ ແກ່ນແທ້ຂອງພາລະກິດຂອງພຣະອົງ ແລະ ເຮັດໃຫ້ພວກເຂົາຮູ້ຄຸນຄ່າວ່າ ສິ່ງທີ່ພວກເຂົາໄດ້ຮັບຈາກຄວາມລອດພົ້ນຂອງພຣະເຈົ້ານັ້ນເໜືອກວ່າສິ່ງທີ່ຜູ້ປະກາດພຣະທຳ ແລະ ອັກຄະສາວົກໄດ້ຮັບຕະຫຼອດທັງຍຸກທີ່ຜ່ານມາ. ຈາກພຣະທຳຂອງພຣະເຈົ້າທຸກຂໍ້ຄວາມ, ເຈົ້າສາມາດຮັບຮູ້ເຖິງທຸກພາກສ່ວນຂອງສະຕິປັນຍາຂອງພຣະອົງພ້ອມທັງຄວາມຮັກ ແລະ ຄວາມຫ່ວງໃຍຢ່າງມີສິນທຳສຳລັບມະນຸດ. ນອກຈາກກ່າວພຣະທຳເຫຼົ່ານີ້ແລ້ວ, ພຣະເຈົ້າຍັງໄດ້ເປີດເຜີຍແນວຄິດ ແລະ ຄວາມຄິດຜິດຜ່ານມາຂອງມະນຸດ ແລະ ສິ່ງຕ່າງໆທີ່ຜູ້ຄົນບໍ່ເຄີຍຈິນຕະນາການມາກ່ອນ, ພ້ອມທັງເສັ້ນທາງທີ່ຜູ້ຄົນຕ້ອງຍ່າງໃນອະນາຄົດ. ບາງເທື່ອ ນີ້ຄື "ຄວາມຮັກ" ອັນຄັບແຄບທີ່ມະນຸດສາມາດຜະເຊີນໄດ້! ຢ່າງໃດກໍຕາມ, ພຣະເຈົ້າໄດ້ມອບທຸກສິ່ງທີ່

ຜູ້ຄົນຕ້ອງການໃຫ້ແກ່ພວກເຂົາ ແລະ ໄດ້ມອບສິ່ງທີ່ພວກເຂົາຮຽກຮ້ອງໃຫ້ແກ່ພວກເຂົາ ໂດຍບໍ່ປິດບັງຫຍັງໄວ້ ຫຼື ຮຽກຮ້ອງສິ່ງໃດຕອບແທນ.

ມີບົດພິເສດສອງສາມບົດໃນພາກນີ້ກ່າວເຖິງພຣະຄຳພີ. ພຣະຄຳພີໄດ້ເປັນສ່ວນໜຶ່ງຂອງປະຫວັດສາດມະນຸດເປັນເວລາສອງສາມພັນປີ. ຍິ່ງໄປກວ່ານັ້ນ ຜູ້ຄົນປະຕິບັດຕໍ່ພຣະຄຳພີຄືກັບພຣະເຈົ້າ, ຈົນເຖິງຂັ້ນທີ່ວ່າ ໃນຍຸກສຸດທ້າຍ ມັນໄດ້ແທນທີ່ຂອງພຣະເຈົ້າໄປແລ້ວ ເຊິ່ງເຮັດໃຫ້ພຣະເຈົ້າກຽດຊັງ. ສະນັ້ນ ເມື່ອເວລາເອື້ອອຳນວຍ ພຣະເຈົ້າຈຶ່ງຮູ້ສຶກວ່າຈຳເປັນຕ້ອງຊີ້ແຈງເລື່ອງລາວພາຍໃນ ແລະ ຕົ້ນກຳເນີດຂອງພຣະຄຳພີ; ຖ້າພຣະອົງບໍ່ເຮັດແບບນີ້, ພຣະຄຳພີກໍຈະສືບຕໍ່ຍຶດຕຳແໜ່ງຂອງພຣະເຈົ້າໃນຫົວໃຈຂອງຜູ້ຄົນ ແລະ ຜູ້ຄົນຈະໃຊ້ພຣະທຳຂອງພຣະເຈົ້າເພື່ອວັດແທກ ແລະ ປະນາມການກະທຳຂອງພຣະເຈົ້າ. ເມື່ອອະທິບາຍເຖິງແກ່ນແທ້, ໂຄງສ້າງ ແລະ ຂໍ້ບົກຜ່ອງໃນພຣະຄຳພີ, ບໍ່ໄດ້ໝາຍຄວາມວ່າພຣະເຈົ້າປະຕິເສດການເປັນຢູ່ຂອງພຣະຄຳພີ ຫຼື ພຣະອົງປະນາມພຣະຄຳພີ; ກົງກັນຂ້າມ ພຣະອົງກຳລັງໃຫ້ຄຳອະທິບາຍທີ່ເໝາະສົມ ແລະ ສົມຄວນ ເພື່ອຟື້ນຟູລັກສະນະດັ້ງເດີມຂອງພຣະຄຳພີ, ເພື່ອກ່າວເຖິງຄວາມເຂົ້າໃຈຜິດຂອງຜູ້ຄົນທີ່ມີຕໍ່ພຣະຄຳພີ ແລະ ມອບມຸມມອງທີ່ຖືກຕ້ອງກ່ຽວກັບພຣະຄຳພີໃຫ້ແກ່ພວກເຂົາ ເພື່ອວ່າ ພວກເຂົາຈະບໍ່ນະມັດສະການພຣະຄຳພີອີກຕໍ່ໄປ ແລະ ບໍ່ຫຼົງຫາຍອີກຕໍ່ໄປ; ໝາຍຄວາມວ່າ ເພື່ອໃຫ້ພວກເຂົາບໍ່ເຂົ້າໃຈຜິດວ່າຄວາມເຊື່ອຢ່າງລັບຫູລັບຕາຂອງພວກເຂົາໃນພຣະຄຳພີນັ້ນເປັນຄືກັບຄວາມເຊື່ອໃນພຣະເຈົ້າ ແລະ ເປັນການນະມັດສະການພຣະເຈົ້າ ໂດຍຢ້ານແມ່ນແຕ່ຈະເປີດເຜີຍເບື້ອງຫຼັງ ແລະ ຂໍ້ບົກຜ່ອງແທ້ຈິງຂອງພຣະຄຳພີ. ຫຼັງຈາກທີ່ຜູ້ຄົນໄດ້ເຂົ້າໃຈຢ່າງສົມບູນກ່ຽວກັບພຣະຄຳພີ, ພວກເຂົາຈຶ່ງຈະສາມາດປະວາງພຣະຄຳພີໄວ້ ໂດຍບໍ່ຮູ້ສຶກຜິດ ແລະ ຍອມຮັບພຣະທຳໃໝ່ຂອງພຣະເຈົ້າຢ່າງກ້າຫານ. ນີ້ຄືເປົ້າໝາຍຂອງພຣະເຈົ້າໃນສອງສາມບົດເຫຼົ່ານີ້. ຄວາມຈິງທີ່ພຣະເຈົ້າປາຖະໜາຈະບອກຜູ້ຄົນໃນນີ້ກໍຄື ບໍ່ມີທິດສະດີ ຫຼື ຄວາມຈິງໃດທີ່ສາມາດແທນທີ່ພາລະກິດ ແລະ ພຣະທຳໃນປັດຈຸບັນຂອງພຣະເຈົ້າ ແລະ ບໍ່ມີຫຍັງທີ່ສາມາດຢືນແທນພຣະເຈົ້າໄດ້. ຖ້າຜູ້ຄົນບໍ່ສາມາດຫຼົບໜີຈາກກັບດັກຂອງພຣະຄຳພີ, ພວກເຂົາຈະບໍ່ສາມາດມາຢູ່ຕໍ່ໜ້າພຣະເຈົ້າໄດ້ຈັກເທື່ອ. ຖ້າພວກເຂົາປາຖະໜາທີ່ຈະມາຢູ່ຕໍ່ໜ້າພຣະເຈົ້າ, ພວກເຂົາຕ້ອງຊໍາລະລ້າງຫົວໃຈຂອງພວກເຂົາຈາກສິ່ງໃດກໍຕາມທີ່ຈະມາແທນທີ່ພຣະອົງ; ແລ້ວເມື່ອນັ້ນພວກເຂົາຈຶ່ງຈະເປັນທີ່ພໍໃຈພຣະເຈົ້າ. ເຖິງແມ່ນພຣະເຈົ້າພຽງແຕ່ອະທິບາຍພຣະຄຳພີໃນນີ້, ຢ່າລືມວ່າມີອີກຫຼາຍສິ່ງທີ່ຜູ້ຄົນນະມັດສະການຢ່າງແທ້ຈິງ ນອກຈາກພຣະຄຳພີ; ສິ່ງດຽວທີ່ພວກເຂົາບໍ່ນະມັດສະການກໍຄືສິ່ງທີ່ມາຈາກພຣະເຈົ້າຢ່າງແທ້ຈິງ. ພຣະເຈົ້າພຽງແຕ່ໃຊ້ພຣະຄຳພີໃຫ້ເປັນຕົວຢ່າງເພື່ອເຕືອນຜູ້ຄົນບໍ່ໃຫ້ຍ່າງໃນເສັ້ນທາງທີ່ຜິດ ແລະ ບໍ່ໃຫ້ອອກນອກເກີນຂອບເຂດອີກ ແລະ ຕົກເປັນເຫຍື່ອຂອງຄວາມສັບສົນ ໃນຂະນະທີ່ພວກເຂົາເຊື່ອໃນພຣະເຈົ້າ ແລະ ຍອມຮັບພຣະທຳຂອງພຣະອົງ.

ພຣະທຳທີ່ພຣະເຈົ້າສະໜອງໃຫ້ແກ່ມະນຸດເລີ່ມຕົ້ນຈາກຈຸດຕື້ນເຖິງຈຸດເລິກເຊິ່ງ. ຫົວຂໍ້ຂອງພຣະຄຳຂອງພຣະອົງເຮັດໃຫ້ມີຄວາມຄືບໜ້າສືບຕໍ່ ນັບຕັ້ງແຕ່ພຶດຕິກຳ ແລະ ການກະທຳພາຍນອກຂອງຜູ້ຄົນໄປຈົນເຖິງອຸປະນິໄສທີ່ເສື່ອມຊາມຂອງພວກເຂົາ ເຊິ່ງເປັນບ່ອນທີ່ພຣະເຈົ້າແນປາຍຫອກ

ດ້ານພາສາຂອງພຣະອົງໃສ່ສ່ວນເລິກທີ່ສຸດຂອງຈິດວິນຍານຂອງຜູ້ຄົນ: ທາດແທ້ຂອງພວກເຂົາ. ໃນຊ່ວງເວລາທີ່ ໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ III" ໄດ້ສະແດງອອກ, ພຣະຄຳຂອງພຣະເຈົ້ານັ້ນ ທາດແທ້ ແລະ ຕົວຕົນຂອງມະນຸດ ແລະ ການເປັນຄົນທີ່ແທ້ຈິງໝາຍເຖິງຫຍັງ, ຄວາມຈິງທີ່ເລິກເຊິ່ງທີ່ສຸດເຫຼົ່ານີ້ ແລະ ຄຳຖາມທີ່ກ່ຽວຂ້ອງກັບທາງເຂົ້າສູ່ຊີວິດຂອງຜູ້ຄົນ. ແນ່ນອນ ເມື່ອຄິດຍ້ອນກັບໄປເຖິງຄວາມຈິງທີ່ພຣະເຈົ້າສະໜອງໃຫ້ແກ່ມະນຸດໃນໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ I", ເນື້ອຫາຂອງ ໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ III" ແມ່ນເລິກເຊິ່ງຢ່າງເຫຼືອເຊື່ອ ເມື່ອປຽບທຽບກັນ. ພຣະທຳໃນພາກນີ້ໄດ້ລາມໄປເຖິງເສັ້ນທາງໃນອະນາຄົດຂອງຜູ້ຄົນ ແລະ ວິທີທີ່ພວກເຂົາສາມາດຖືກເຮັດໃຫ້ສົມບູນ; ພວກມັນຍັງລາມໄປເຖິງຈຸດໝາຍປາຍທາງໃນອະນາຄົດຂອງມະນຸດຊາດ ແລະ ວິທີທີ່ພຣະເຈົ້າ ແລະ ມະນຸດຈະເຂົ້າສູ່ຄວາມສະຫງົບຮ່ວມກັບມະນຸດ. (ມັນສາມາດເວົ້າໄດ້ວ່າ ໃນປັດຈຸບັນ ພຣະທຳເຫຼົ່ານີ້ແມ່ນພຣະທຳທີ່ພຣະເຈົ້າໄດ້ກ່າວຕໍ່ມະນຸດ ໂດຍກ່ຽວຂ້ອງກັບທາດແທ້ຂອງພວກເຂົາ, ພາລະກິດຂອງພວກເຂົາ ແລະ ຈຸດໝາຍປາຍທາງຂອງພວກເຂົາ ເຊິ່ງງ່າຍທີ່ສຸດທີ່ຈະເຂົ້າໃຈ). ມັນຄືຄວາມຫວັງຂອງພຣະເຈົ້າສຳລັບຜູ້ຄົນທີ່ອ່ານພຣະທຳເຫຼົ່ານີ້ຈະເປັນຄົນທີ່ແຍກຕົນເອງອອກຈາກແນວຄິດ ແລະ ຈິນຕະນາການຂອງຕົນເອງ, ຈະເປັນຜູ້ທີ່ສາມາດມີຄວາມເຂົ້າໃຈຢ່າງບໍລິສຸດກ່ຽວກັບພຣະທຳທຸກຂໍ້ຂອງພຣະເຈົ້າໃນສ່ວນເລິກຂອງຫົວໃຈຂອງພວກເຂົາ. ຍິ່ງໄປກວ່ານັ້ນ, ພຣະອົງຫວັງວ່າ ທຸກຄົນທີ່ອ່ານພຣະທຳເຫຼົ່ານີ້ຈະສາມາດຖືເອົາພຣະທຳຂອງພຣະອົງເປັນຄວາມຈິງ, ຫົນທາງ ແລະ ຊີວິດ ແລະ ພວກເຂົາຈະບໍ່ປະຕິບັດຕໍ່ພຣະເຈົ້າຢ່າງຖືເບົາ ຫຼື ຊັກຊວນພຣະອົງ. ຖ້າຜູ້ຄົນອ່ານພຣະທຳເຫຼົ່ານີ້ດ້ວຍທ່າທີເພື່ອກວດສອບ ຫຼື ພິຈາລະນາພຣະເຈົ້າ, ແລ້ວພຣະຄຳເຫຼົ່ານີ້ກໍຈະເປັນຄືກັບປຶ້ມທີ່ປິດໄວ້ສຳລັບພວກເຂົາ. ມີພຽງຄົນທີ່ສະແຫວງຫາຄວາມຈິງ, ຄົນທີ່ຕັ້ງໃຈຕິດຕາມພຣະເຈົ້າ ແລະ ຄົນທີ່ປາສະຈາກຂໍ້ສົງໄສກ່ຽວກັບພຣະອົງແມ່ນແຕ່ໜ້ອຍດຽວຈຶ່ງມີຄຸນສົມບັດທີ່ຈະຍອມຮັບເອົາພຣະທຳເຫຼົ່ານີ້.

ໜັງສື "ພຣະທຳຂອງພຣະຄຣິດໃນຂະນະທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ IV" ບໍ່ແມ່ນອີກປະເພດໜຶ່ງຂອງພຣະຄຳສັກສິດ ທີ່ມາຕາມຫຼັງ ບົດ "ພຣະທຳຂອງພຣະເຈົ້າຕໍ່ກັບຈັກກະວານທັງໝົດ". ພາກນີ້ປະກອບມີການຕັກເຕືອນ, ການສັ່ງສອນ ແລະ ການເປີດເຜີຍຂອງພຣະເຈົ້າແກ່ຜູ້ຄົນໃນນິກາຍຕ່າງໆຂອງຄຣິສຕຽນ ເຊັ່ນໃນບົດ: "ເວລາທີ່ເຈົ້າເຫັນຮ່າງກາຍຝ່າຍວິນຍານຂອງພຣະເຢຊູ, ພຣະເຈົ້າແມ່ນໄດ້ສ້າງສະຫວັນ ແລະ ແຜ່ນດິນໂລກຂຶ້ນໃໝ່ແລ້ວ", "ຜູ້ທີ່ບໍ່ສາມາດເຂົ້າກັບພຣະຄຣິດເປັນປໍລະປັກກັບພຣະເຈົ້າຢ່າງແນ່ນອນ". ນອກນັ້ນຍັງປະກອບມີເງື່ອນໄຂສະເພາະທີ່ສຸດຂອງພຣະເຈົ້າສຳລັບມະນຸດຊາດ ເຊັ່ນໃນບົດ: "ກະກຽມຄວາມດີໃຫ້ພຽງພໍສຳລັບຈຸດໝາຍປາຍທາງຂອງເຈົ້າ", "ພຣະໂອວາດສາມຂໍ້", "ການເຮັດຜິດຈະນຳພາມະນຸດໄປສູ່ນະຣົກ". ຫຼາຍດ້ານທີ່ຖືກກ່າວເຖິງ ເຊັ່ນ: ການເປີດເຜີຍ ແລະ ການພິພາກສາສຳລັບຄົນທຸກປະເພດ ແລະ ພຣະທຳເພື່ອຮູ້ຈັກພຣະເຈົ້າ. ສາມາດເວົ້າໄດ້ວ່າ ພາກນີ້ເປັນແກ່ນຫຼັກຂອງການພິພາກສາມະນຸດຊາດ. ສ່ວນທີ່ບໍ່ສາມາດລືມໄດ້ທີ່ສຸດຂອງ

ພາກນີ້ໃນພຣະຄຳຂອງພຣະເຈົ້າກໍຄື ເມື່ອພຣະເຈົ້າກຳລັງຈະປິດຜ້າກັ້ງໃນພາລະກິດຂອງພຣະອົງ, ພຣະອົງໄດ້ເປີດເຜີຍສິ່ງທີ່ຢູ່ໃນໄຂກະດູກດຳຂອງຜູ້ຄົນ: ການທໍລະຍົດ. ຈຸດປະສົງຂອງພຣະອົງແມ່ນໃຫ້ຜູ້ຄົນຮູ້ຈັກຂໍ້ແທ້ຈິງໃນຕອນສຸດທ້າຍ ແລະ ເພື່ອເຜົາຜານມັນເຂົ້າໃນສ່ວນເລິກທີ່ສຸດໃນຫົວໃຈຂອງພວກເຂົາ: ມັນບໍ່ສຳຄັນວ່າເຈົ້າເປັນຜູ້ຕິດຕາມພຣະເຈົ້າໄດ້ດົນປານໃດ, ທຳມະຊາດຂອງເຈົ້າກໍຍັງຄືການທໍລະຍົດພຣະເຈົ້າ. ເວົ້າອີກຢ່າງໜຶ່ງກໍຄື ການທໍລະຍົດພຣະເຈົ້າຢູ່ໃນທຳມະຊາດຂອງມະນຸດ, ຍ້ອນຜູ້ຄົນບໍ່ສາມາດບັນລຸຄວາມເປັນຜູ້ໃຫຍ່ທີ່ແທ້ຈິງໃນຊີວິດຂອງພວກເຂົາ ແລະ ສາມາດມີພຽງແຕ່ການປ່ຽນແປງເລັກນ້ອຍໃນອຸປະນິໄສຂອງພວກເຂົາ. ເຖິງແມ່ນທັງສອງບົດນີ້, "ການທໍລະຍົດ (1)" ແລະ "ການທໍລະຍົດ (2)" ໄດ້ໂຈມຕີຜູ້ຄົນ, ພວກມັນກໍເປັນຄຳເຕືອນທີ່ຊື່ສັດ ແລະ ເມດຕາທີ່ສຸດຂອງພຣະເຈົ້າຕໍ່ຜູ້ຄົນ. ຢ່າງໜ້ອຍທີ່ສຸດ, ເມື່ອຜູ້ຄົນເພິ່ງພໍໃຈ ແລະ ຍິ່ງທະນົງຕົນ, ຫຼັງຈາກທີ່ໄດ້ອ່ານທັງສອງບົດນີ້, ຄວາມຊົ່ວຮ້າຍຂອງພວກເຂົາເອງກໍຈະຖືກກວດສອບ ແລະ ພວກເຂົາຈະງຽບລົງ. ຜ່ານທັງສອງບົດນີ້, ພຣະເຈົ້າຕຳນິທຸກຄົນ ບໍ່ວ່າຊີວິດຂອງເຈົ້າຈະເປັນຜູ້ໃຫຍ່ສໍ່າໃດກໍຕາມ, ປະສົບການຂອງເຈົ້າຈະເລິກເຊິ່ງຫຼາຍສໍ່າໃດກໍຕາມ, ຄວາມໝັ້ນໃຈຂອງເຈົ້າມີຫຼາຍສໍ່າໃດກໍຕາມ, ບໍ່ວ່າເຈົ້າເກີດຢູ່ໃສ ແລະ ເຈົ້າກຳລັງຈະໄປໃສກໍຕາມ, ທຳມະຊາດຂອງເຈົ້າທີ່ທໍລະຍົດຕໍ່ພຣະເຈົ້າແມ່ນມີແນວໂນ້ມທີ່ຈະເປີດເຜີຍຕົວມັນເອງໄດ້ໃນທຸກເວລາ ແລະ ທຸກບ່ອນ. ສິ່ງທີ່ພຣະເຈົ້າຕ້ອງການບອກກັບແຕ່ລະຄົນກໍຄື: ມັນຄືທຳມະຊາດໂດຍກຳເນີດຂອງແຕ່ລະຄົນທີ່ທໍລະຍົດພຣະເຈົ້າ. ແນ່ນອນ ເຈດຕະນາຂອງພຣະອົງໃນການກ່າວທັງສອງບົດນີ້ບໍ່ແມ່ນເພື່ອຄົ້ນຫາຂໍ້ອ້າງເພື່ອກຳຈັດ ຫຼື ປະນາມມະນຸດຊາດ, ແຕ່ເພື່ອເຮັດໃຫ້ຜູ້ຄົນຮູ້ຈັກເຖິງທຳມະຊາດຂອງມະນຸດຫຼາຍຂຶ້ນ, ເພື່ອວ່າພວກເຂົາຈະສາມາດດຳລົງຊີວິດຢູ່ຢ່າງລະມັດລະວັງຕໍ່ໜ້າພຣະເຈົ້າຢູ່ຕະຫຼອດເວລາເພື່ອຮັບເອົາການນຳພາຂອງພຣະອົງ ເຊິ່ງຈະຢຸດພວກເຂົາບໍ່ໃຫ້ສູນເສຍການສະຖິດຂອງພຣະເຈົ້າ ແລະ ກ້າວເດີນໃນເສັ້ນທາງທີ່ບໍ່ສາມາດຫວນກັບຄືນໄດ້. ທັງສອງບົດນີ້ຄືລະຄັງສັນຍານສຳລັບທຸກຄົນທີ່ຕິດຕາມພຣະເຈົ້າ. ຫວັງວ່າ, ຜູ້ຄົນຈະເຂົ້າໃຈເຈດຕະນາທີ່ແທ້ຈິງຂອງພຣະເຈົ້າ; ບໍ່ວ່າຢ່າງໃດກໍຕາມ, ພຣະທຳເຫຼົ່ານີ້ລ້ວນແລ້ວແຕ່ເປັນຄວາມຈິງທີ່ບໍ່ສາມາດໂຕ້ແຍ້ງໄດ້, ແລ້ວມະນຸດຈຳເປັນຕ້ອງຖຽງກັນກ່ຽວກັບເວລາ ແລະ ວິທີທີ່ພຣະເຈົ້າຈະກ່າວພຣະທຳເຫຼົ່ານີ້ເຮັດຫຍັງ? ຖ້າພຣະເຈົ້າເກັບທຸກສິ່ງເຫຼົ່ານີ້ໄວ້ກັບພຣະອົງເອງ ແລະ ລໍຖ້າຈົນເຖິງເວລາທີ່ຜູ້ຄົນເຊື່ອວ່າ ມັນເໝາະສົມສຳລັບພຣະອົງທີ່ຈະກ່າວພຣະທຳເຫຼົ່ານີ້, ມັນຈະບໍ່ຊ້າເກີນໄປບໍ? ເມື່ອໃດຈະເປັນເວລາທີ່ເໝາະສົມທີ່ສຸດນັ້ນ?

ພຣະເຈົ້າໃຊ້ວິທີການ ແລະ ທັດສະນະຫຼາຍຢ່າງໃນສີ່ພາກເຫຼົ່ານີ້. ຕົວຢ່າງເຊັ່ນ: ບາງເທື່ອພຣະເຈົ້າໃຊ້ການສຽດສີ ແລະ ບາງຄັ້ງ ພຣະອົງໃຊ້ວິທີການສະໜອງ ການສັ່ງສອນໂດຍກົງ; ບາງເທື່ອພຣະອົງໃຊ້ຕົວຢ່າງ ແລະ ບາງຄັ້ງ ພຣະອົງໃຊ້ການປະນາມທີ່ຮຸນແຮງ. ໂດຍລວມແລ້ວແມ່ນມີວິທີການທີ່ແຕກຕ່າງກັນທຸກປະເພດ, ໂດຍມີເປົ້າໝາຍເພື່ອຮັບໃຊ້ຫຼາກຫຼາຍສະພາບ ແລະ ລັກຊາດຂອງຜູ້ຄົນ. ທັດສະນະທີ່ພຣະອົງກ່າວແມ່ນປ່ຽນແປງໄປພ້ອມກັບວິທີການ ແລະ ເນື້ອຫາຂອງພຣະຄຳຂອງພຣະອົງທີ່ແຕກຕ່າງກັນ. ຕົວຢ່າງເຊັ່ນ: ບາງເທື່ອ ພຣະອົງກ່າວວ່າ "ເຮົາ"; ນັ້ນກໍຄື ພຣະອົງກ່າວຕໍ່ຜູ້ຄົນຈາກ

ທັດສະນະຂອງພຣະເຈົ້າເອງ. ບາງຄັ້ງ ພຣະອົງກ່າວຈາກບຸກຄົນທີສາມ ໂດຍເວົ້າວ່າ "ພຣະເຈົ້າ" ເປັນແບບນີ້ ຫຼື ແບບນັ້ນ ແລະ ມີບາງເວລາທີ່ພຣະອົງກ່າວຈາກທັດສະນະຂອງມະນຸດ. ບໍ່ວ່າພຣະອົງຈະກ່າວຈາກທັດສະນະໃດກໍຕາມ, ແກ່ນແທ້ຂອງພຣະອົງບໍ່ໄດ້ປ່ຽນແປງ, ຍ້ອນວ່າ ບໍ່ວ່າພຣະອົງຈະກ່າວແນວໃດກໍຕາມ, ທຸກສິ່ງທີ່ພຣະອົງກ່າວຄືແກ່ນແທ້ຂອງພຣະເຈົ້າເອງ, ມັນຄືຄວາມຈິງທັງໝົດ ແລະ ມັນຄືສິ່ງທີ່ມະນຸດຊາດຕ້ອງການ.

# ພຣະທຳຂອງພຣະຄຣິດໃນຂະນະ
# ທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ

# I

(ມິຖຸນາ 1992 ຫາ ຕຸລາ 1992)

# ເສັ້ນທາງ... (1)

ໃນຊົ່ວຊີວິດຂອງພວກເຂົາ, ບໍ່ມີຜູ້ໃດຮູ້ວ່າພວກເຂົາຈະພະເຊີນກັບຄວາມຍາກລຳບາກແບບໃດ ຫຼື ພວກເຂົາຈະຕົກຢູ່ໃນການຫຼໍ່ຫຼອມແບບໃດ. ສຳລັບບາງຄົນ ມັນແມ່ນຢູ່ໃນວຽກງານຂອງພວກເຂົາ, ສຳລັບບາງຄົນ ມັນແມ່ນຢູ່ໃນຄວາມຄາດຫວັງສຳລັບອະນາຄົດຂອງພວກເຂົາ, ສຳລັບບາງຄົນ ມັນແມ່ນຢູ່ໃນຄອບຄົວທີ່ພວກເຂົາໄດ້ເກີດມາ ແລະ ສຳລັບບາງຄົນ ມັນແມ່ນຢູ່ໃນຊີວິດຄູ່ຂອງພວກເຂົາ. ແຕ່ຄວາມແຕກຕ່າງລະຫວ່າງພວກເຂົາ ແລະ ພວກເຮົາກໍຄື ໃນປັດຈຸບັນ ພວກເຮົາ ເຊິ່ງເປັນຄົນກຸ່ມນີ້ ກຳລັງທົນທຸກຢູ່ໃນທ່າມກາງພຣະທຳຂອງພຣະເຈົ້າ. ນັ້ນກໍຄື ໃນຖານະຄົນຮັບໃຊ້ພຣະເຈົ້າ ພວກເຮົາໄດ້ທົນທຸກກັບຄວາມຍາກລຳບາກໃນເສັ້ນທາງແຫ່ງການເຊື່ອໃນພຣະອົງ ເຊິ່ງເປັນເສັ້ນທາງທີ່ຜູ້ເຊື່ອທຸກຄົນໄດ້ຍ່າງ ແລະ ຫົນທາງທີ່ຢູ່ພາຍໃຕ້ຕີນຂອງພວກເຮົາທັງໝົດ. ນັບຕັ້ງແຕ່ຈຸດນີ້ເປັນຕົ້ນມາທີ່ພວກເຮົາໄດ້ເລີ່ມຕົ້ນເສັ້ນທາງແຫ່ງການເຊື່ອໃນພຣະເຈົ້າຢ່າງເປັນທາງການ, ເປີດຜ້າກັ້ງໃນຊີວິດຂອງມະນຸດຢ່າງເປັນທາງການ ແລະ ກ້າວເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນຊີວິດ. ເວົ້າອີກຢ່າງໜຶ່ງກໍຄື ນີ້ຄືເວລາທີ່ພວກເຮົາກ້າວເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງການທີ່ພຣະເຈົ້າດຳລົງຊີວິດຢູ່ຄຽງຂ້າງມະນຸດ, ເຊິ່ງເປັນເສັ້ນທາງທີ່ຜູ້ຄົນທົ່ວໄປຍ່າງ. ໃນຖານະເປັນຄົນທີ່ຢືນຢູ່ຕໍ່ໜ້າພຣະເຈົ້າ ແລະ ຮັບໃຊ້ພຣະເຈົ້າ, ຄົນທີ່ນຸ່ງເສື້ອຄຸມປະໂລຫິດໃນພຣະວິຫານ ທີ່ ມີກຽດສັກສີ, ມີສິດອຳນາດ ແລະ ຄວາມສະຫງ່າຜ່າເຜີຍຂອງພຣະເຈົ້າ, ເຮົາຂໍປະກາດດັ່ງຕໍ່ໄປນີ້ກັບທຸກຄົນໂດຍສະເພາະ: ໃບໜ້າທີ່ມີສະຫງ່າລາສີຂອງພຣະເຈົ້າຄືສະຫງ່າລາສີຂອງເຮົາ, ແຜນການຄຸ້ມຄອງຂອງພຣະອົງຄືແກ່ນສຳຄັນຂອງເຮົາ. ເຮົາບໍ່ສະແຫວງຫາເພື່ອຮັບເອົາຮ້ອຍເທົ່າໃນໂລກທີ່ຈະມາເຖິງ, ພຽງແຕ່ປະຕິບັດຄວາມປະສົງຂອງພຣະເຈົ້າໃນໂລກນີ້, ເພື່ອວ່າພຣະອົງຈະໄດ້ຮັບສ່ວນເລັກນ້ອຍສ່ວນໜຶ່ງຈາກສະຫງ່າລາສີຂອງພຣະອົງເທິງແຜ່ນດິນໂລກ ຈາກຄວາມພະຍາຍາມອັນເລັກນ້ອຍທີ່ເຮົາໄດ້ປະຕິບັດໃນເນື້ອໜັງ. ນີ້ແມ່ນຄວາມປາຖະໜາດຽວຂອງເຮົາ. ໃນຄວາມຄິດເຫັນຂອງເຮົາ, ນີ້ຄືອາຫານຝ່າຍວິນຍານຢ່າງດຽວຂອງເຮົາ. ເຮົາເຊື່ອວ່າ ສິ່ງເຫຼົ່ານີ້ຄວນເປັນ “ຄຳເວົ້າສຸດທ້າຍ” ຂອງຜູ້ໃດຜູ້ໜຶ່ງທີ່ດຳລົງຊີວິດໃນເນື້ອໜັງ ແລະ ຜູ້ທີ່ເຕັມໄປດ້ວຍຄວາມຮູ້ສຶກ. ນີ້ຄືເສັ້ນທາງທີ່ຢູ່ພາຍໃຕ້ຕີນຂອງເຮົາໃນມື້ນີ້. ເຮົາເຊື່ອວ່າ ທັດສະນະນີ້ຂອງເຮົາຈະເປັນພຣະທຳສຸດທ້າຍຂອງເຮົາທີ່ຢູ່ໃນເນື້ອໜັງ ແລະ ເຮົາຫວັງວ່າຜູ້ຄົນຈະບໍ່ມີແນວຄິດ ຫຼື ຄວາມຄິດຕ່າງໆກ່ຽວກັບເຮົາ. ເຖິງແມ່ນເຮົາໄດ້ພະຍາຍາມສຸດຄວາມສາມາດຂອງເຮົາ, ເຮົາກໍຍັງບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າທີ່ຢູ່ໃນສະຫວັນໄດ້. ເຮົາເສົ້າໃຈເຫຼືອເກີນ. ເຫດໃດສິ່ງນີ້ຈຶ່ງເປັນທາດແທ້ຂອງເນື້ອໜັງ? ສະນັ້ນ ມັນເປັນພຽງຍ້ອນຜົນຕາມມາຂອງສິ່ງຕ່າງໆທີ່ເຮົາໄດ້ເຮັດໃນອະດີດເທົ່ານັ້ນ ແລະ ຍ້ອນພາລະກິດແຫ່ງການເອົາຊະນະທີ່ພຣະເຈົ້າໄດ້ປະຕິບັດໃນຕົວເຮົາ, ເຮົາຈຶ່ງໄດ້ຮັບຄວາມເຂົ້າໃຈຢ່າງເລິກເຊິ່ງຂຶ້ນກ່ຽວກັບທາດແທ້ຂອງມະນຸດຊາດ. ດ້ວຍເຫດນັ້ນ ເຮົາຈຶ່ງໄດ້ກຳນົດມາດຕະຖານພື້ນຖານທີ່ສຸດສຳລັບຕົນເອງ: ສະແຫວງຫາເພື່ອປະຕິບັດຄວາມປະສົງຂອງພຣະເຈົ້າເທົ່ານັ້ນ, ພະຍາຍາມສຸດຄວາມສາມາດຂອງເຮົາ ແລະ ບໍ່ໃຫ້ມີສິ່ງໃດມາຊັ່ງຊາຄວາມສຳນຶກຂອງເຮົາ. ເຮົາບໍ່ສົນໃຈຕໍ່ສິ່ງທີ່

ຄົນອື່ນທີ່ຮັບໃຊ້ພຣະເຈົ້າຮຽກຮ້ອງສຳລັບພວກເຂົາເອງ. ສະຫຼຸບກໍຄື ເຮົາໄດ້ຕັ້ງໃຈຂອງເຮົາເພື່ອປະຕິບັດຄວາມປະສົງຂອງພຣະອົງ. ນີ້ຄືຄຳສາລະພາບຂອງເຮົາໃນຖານະທີ່ເປັນຜູ້ໜຶ່ງໃນການເນລະມິດສ້າງຂອງພຣະອົງ ທີ່ຮັບໃຊ້ຢູ່ຕໍ່ໜ້າພຣະອົງ, ເປັນຄົນທີ່ຖືກຊ່ວຍໃຫ້ລອດພົ້ນ ແລະ ເປັນທີ່ຮັກຂອງພຣະເຈົ້າ ແລະ ຜູ້ທີ່ໄດ້ທົນທຸກກັບການໂຈມຕີຂອງພຣະອົງ. ນີ້ຄືຄຳສາລະພາບຂອງຄົນທີ່ຖືກເຝົ້າເບິ່ງ, ຖືກປົກປ້ອງ, ຖືກຮັກ ແລະ ຖືກໃຊ້ຢ່າງຫຼວງຫຼາຍໂດຍພຣະເຈົ້າ. ຕັ້ງແຕ່ນີ້ເປັນຕົ້ນໄປ, ເຮົາຈະສືບຕໍ່ໃນເສັ້ນທາງນີ້ຈົນເຮົາໄດ້ສຳເລັດໜ້າທີ່ສຳຄັນທີ່ພຣະເຈົ້າໄດ້ມອບໝາຍໃຫ້ກັບເຮົາ. ແຕ່ໃນຄວາມຄິດເຫັນຂອງເຮົາ, ຈຸດຈົບຂອງເສັ້ນທາງແມ່ນໃກ້ຈະມາເຖິງແລ້ວ, ຍ້ອນພາລະກິດຂອງພຣະອົງໄດ້ສຳເລັດແລ້ວ ແລະ ມາຮອດປັດຈຸບັນນີ້ ຜູ້ຄົນແມ່ນໄດ້ເຮັດທຸກສິ່ງທີ່ພວກເຂົາສາມາດເຮັດໝົດແລ້ວ.

ທາງເຂົ້າຂອງປະເທດຈີນແຜ່ນດິນໃຫຍ່ສູ່ກະແສແຫ່ງການຟື້ນຟູນີ້ໄດ້ເຮັດໃຫ້ເກີດຄຣິສຕະຈັກທ້ອງຖິ່ນ ທີ່ເປັນຈຸດສູນລວມແຫ່ງພາລະກິດຂອງພຣະວິນຍານບໍລິສຸດ. ພຣະເຈົ້າໄດ້ປະຕິບັດພາລະກິດຢ່າງບໍ່ຢຸດເຊົາໃນຄຣິສຕະຈັກທ້ອງຖິ່ນເຫຼົ່ານີ້, ຍ້ອນຄຣິສຕະຈັກທີ່ເກີດໃນເວລານີ້ໄດ້ກາຍມາເປັນແກ່ນສຳຄັນຂອງພຣະເຈົ້າໃນຄອບຄົວຈັກກະພັດທີ່ລົ້ມສະຫຼາຍ. ແນ່ນອນ ພຣະເຈົ້າດີໃຈເຫຼືອເກີນທີ່ໄດ້ສ້າງຕັ້ງຄຣິສຕະຈັກທ້ອງຖິ່ນໃນຄອບຄົວດັ່ງກ່າວ, ຄວາມສຸກຂອງພຣະອົງຄືຄວາມສຸກທີ່ເໜືອຄຳບັນຍາຍ. ຫຼັງຈາກທີ່ໄດ້ສ້າງຕັ້ງຄຣິສຕະຈັກທ້ອງຖິ່ນໃນປະເທດຈີນແຜ່ນດິນໃຫຍ່ ແລະ ເຜີຍແຜ່ຂ່າວດີນີ້ໃຫ້ແກ່ອ້າຍເອື້ອຍນ້ອງໃນຄຣິສຕະຈັກທ້ອງຖິ່ນອື່ນໆທົ່ວແຜ່ນດິນໂລກ, ພຣະເຈົ້າກໍຕື່ນເຕັ້ນຫຼາຍ, ນີ້ຄືບາດກ້າວທຳອິດຂອງພາລະກິດທີ່ພຣະອົງເຈດຕະນາຈະປະຕິບັດໃນປະເທດຈີນແຜ່ນດິນໃຫຍ່. ສາມາດເວົ້າໄດ້ວ່າ ນີ້ຄືການກະທຳຢ່າງທຳອິດ. ແລ້ວຄວາມສາມາດຂອງພຣະອົງທີ່ຈະເລີ່ມຕົ້ນບາດກ້າວທຳອິດຂອງພາລະກິດຂອງພຣະອົງໃນປ້ອມປາການຂອງຜີຮ້າຍດັ່ງກ່າວນີ້ ເຊິ່ງເປັນປ້ອມປາການທີ່ບໍ່ສາມາດໂຈມຕີໄດ້ໂດຍມະນຸດຄົນໃດ ຫຼື ສິ່ງໃດນັ້ນ ບໍ່ແມ່ນລິດອຳນາດຂອງພຣະເຈົ້າບໍ? ມັນຊັດເຈນແລ້ວວ່າ ເພື່ອການຟື້ນຟູຂອງພາລະກິດນີ້, ອ້າຍເອື້ອຍນ້ອງຈຳນວນນັບບໍ່ຖ້ວນໄດ້ຖືກກົດຂີ່ຂົ່ມເຫັງ ແລະ ຕາຍພາຍໃຕ້ມີດປາດຊີ້ນຂອງຜີຮ້າຍ. ມັນເຮັດໃຫ້ເຮົາເຈັບປວດ ແລະ ໃຈຮ້າຍທີ່ນຳສິ່ງນີ້ຂຶ້ນມາເວົ້າໃນຕອນນີ້, ແຕ່ສຳລັບສ່ວນໃຫຍ່ແລ້ວ, ມື້ແຫ່ງການທົນທຸກແມ່ນໄດ້ຜ່ານໄປແລ້ວ. ການທີ່ເຮົາສາມາດປະຕິບັດພາລະກິດສຳລັບພຣະເຈົ້າໃນປັດຈຸບັນ ແລະ ການທີ່ເຮົາສາມາດໄດ້ມາເຖິງບ່ອນທີ່ເຮົາຢູ່ໃນປັດຈຸບັນ ກໍເນື່ອງຈາກລິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າທັງສິ້ນ. ເຮົາຮູ້ສຶກຍ້ອງຍໍຊົມເຊີຍຢ່າງໃຫຍ່ກັບຄົນທີ່ພຣະເຈົ້າໄດ້ເລືອກສຳລັບການເສຍສະຫຼະຊີວິດ; ພວກເຂົາສາມາດປະຕິບັດຄວາມປະສົງຂອງພຣະເຈົ້າ ແລະ ເສຍສະຫຼະຕົນເອງເພື່ອພຣະເຈົ້າ. ເວົ້າຕາມຄວາມຈິງ, ຖ້າມັນບໍ່ແມ່ນຍ້ອນຄວາມກະລຸນາ ແລະ ຄວາມເມດຕາຂອງພຣະເຈົ້າ, ເຮົາກໍຄົງຈະລົ້ມລົງໃນບຶງຂີ້ຕົມຕັ້ງແຕ່ດົນແລ້ວ. ຂອບພຣະຄຸນພຣະເຈົ້າ! ເຮົາປາຖະໜາທີ່ຈະມອບສະຫງ່າລາສີທັງໝົດໃຫ້ແກ່ພຣະເຈົ້າ ເພື່ອວ່າພຣະອົງຈະສາມາດພັກຜ່ອນໄດ້. ບາງຄົນຖາມເຮົາວ່າ: “ຍ້ອນຕຳແໜ່ງຂອງພຣະອົງ, ພຣະອົງບໍ່ຄວນຕາຍ. ເປັນຫຍັງພຣະອົງຈຶ່ງມີຄວາມສຸກ ເມື່ອພຣະເຈົ້າກ່າວເຖິງຄວາມຕາຍ?” ແທນທີ່ຈະຕອບໂດຍກົງ, ເຮົາກໍພຽງແຕ່ມອບຮອຍຍິ້ມເລັກນ້ອຍ ແລະ ເວົ້າວ່າ “ນີ້ຄືເສັ້ນທາງທີ່ເຮົາຕ້ອງສະແຫວງຫາ, ທີ່ເຮົາຕ້ອງ

ປະຕິບັດຕາມຢ່າງເດັດຂາດ”. ຜູ້ຄົນສັບສົນຍ້ອນຄຳຕອບຂອງເຮົາ. ພວກເຂົາພຽງແຕ່ສາມາດເບິ່ງເຮົາດ້ວຍຄວາມປະຫຼາດໃຈ, ສົງໄສໃນຕົວເຮົາເລັກນ້ອຍ. ເຖິງຢ່າງໃດກໍຕາມ, ເຮົາເຊື່ອວ່າ ຍ້ອນນີ້ຄືເສັ້ນທາງທີ່ເຮົາໄດ້ເລືອກ ແລະ ມັນຍັງເປັນຄວາມຕັ້ງໃຈທີ່ເຮົາມີຕໍ່ໜ້າພຣະເຈົ້າ, ແລ້ວບໍ່ວ່າຄວາມຫຍຸ້ງຍາກຈະໃຫຍ່ສໍ່າໃດກໍຕາມ, ເຮົາຕ້ອງສືບຕໍ່ຝ່າຟັນໄປຂ້າງໜ້າໃຫ້ໄດ້. ເຮົາຄິດວ່າ ນີ້ຄືສັນຍາທີ່ຄົນຮັບໃຊ້ພຣະເຈົ້າຄວນຍຶດຖື ແລະ ພວກເຂົາຕ້ອງບໍ່ກັບຄຳຂອງຕົນເອງ ແມ່ນແຕ່ໜ້ອຍດຽວ. ນີ້ຍັງເປັນກົດລະບຽບ ແລະ ຂໍ້ກຳນົດທີ່ວາງໄວ້ແຕ່ດົນມາແລ້ວ ໃນຍຸກແຫ່ງພຣະບັນຍັດທີ່ຄົນເຊື່ອໃນພຣະເຈົ້າຄວນເຂົ້າໃຈ. ໃນປະສົບການຂອງເຮົາ, ເຖິງແມ່ນຄວາມຮູ້ຂອງເຮົາກ່ຽວກັບພຣະເຈົ້າບໍ່ໄດ້ມີຫຼາຍ ແລະ ສິ່ງທີ່ເຮົາໄດ້ພະເຊີນກໍພຽງເລັກໆນ້ອຍໆ, ບໍ່ສົມຄວນທີ່ຈະກ່າວເຖິງ ແລະ ເຮົາບໍ່ມີຄວາມຮູ້ຢ່າງສະຫຼາດໃຫ້ເວົ້າເຖິງ, ພຣະທຳຂອງພຣະເຈົ້າຕ້ອງຖືກຍຶດຖື ແລະ ບໍ່ສາມາດຖືກທ້າທາຍໄດ້. ຄວາມຈິງແລ້ວ, ປະສົບການຕົວຈິງຂອງເຮົາເອງກໍເລັກໆນ້ອຍໆ, ແຕ່ຍ້ອນພຣະເຈົ້າເປັນພະຍານໃຫ້ແກ່ເຮົາ ແລະ ຜູ້ຄົນມີຄວາມເຊື່ອແບບລັບຫູລັບຕາໃນຕົວຕົນທີ່ເຮົາເປັນຢູ່ສະເໝີ, ເຮົາຈະສາມາດເຮັດຫຍັງໄດ້? ແຕ່ເຮົາຍັງຫວັງວ່າ ຜູ້ຄົນຈະແກ້ໄຂມຸມມອງຂອງພວກເຂົາທີ່ກ່ຽວກັບການຮັກພຣະເຈົ້າ. ຕົວຕົນທີ່ເຮົາເປັນບໍ່ມີຄ່າຫຍັງເລີຍ; ສຳລັບເຮົາແລ້ວ ເຮົາກໍສະແຫວງຫາຫົນທາງແຫ່ງຄວາມເຊື່ອໃນພຣະເຈົ້າເຊັ່ນກັນ ແລະ ເສັ້ນທາງທີ່ເຮົາຍ່າງກໍບໍ່ໄດ້ເປັນແນວອື່ນ ນອກຈາກເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າເຊັ່ນກັນ. ຜູ້ໃດຜູ້ໜຶ່ງທີ່ອາດດີ, ແຕ່ບໍ່ຄວນເປັນເປົ້າໝາຍຂອງການນະມັດສະການ, ພວກເຂົາພຽງແຕ່ສາມາດເຮັດໜ້າທີ່ເປັນແບບຢ່າງໃຫ້ຕິດຕາມເທົ່ານັ້ນ. ເຮົາບໍ່ສົນໃຈວ່າຄົນອື່ນເຮັດຫຍັງ, ແຕ່ເຮົາຂໍປະກາດໃຫ້ຜູ້ຄົນຮູ້ວ່າ ເຮົາມອບສະຫງ່າລາສີໃຫ້ແກ່ພຣະເຈົ້າ; ເຮົາບໍ່ມອບສະຫງ່າລາສີຂອງພຣະວິນຍານໃຫ້ແກ່ເນື້ອໜັງ. ເຮົາຫວັງວ່າ ທຸກຄົນຈະສາມາດເຂົ້າໃຈຄວາມຮູ້ສຶກຂອງເຮົາກ່ຽວກັບສິ່ງນີ້. ນີ້ບໍ່ແມ່ນວ່າເຮົາກຳລັງໜີຄວາມຮັບຜິດຊອບຂອງເຮົາ, ມັນຄືເລື່ອງລາວແທ້ຈິງທັງໝົດ. ສິ່ງນີ້ຄວນຈະເຂົ້າໃຈຢ່າງຊັດເຈນ, ດັ່ງນັ້ນ ມັນຈຶ່ງຈະບໍ່ໄດ້ເວົ້າເຖິງອີກ.

ມື້ນີ້, ເຮົາໄດ້ຮັບແສງສະຫວ່າງຕໍ່ໜ້າພຣະເຈົ້າ. ພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກແມ່ນພາລະກິດແຫ່ງຄວາມລອດພົ້ນ. ມັນບໍ່ໄດ້ເຈືອປົນໂດຍສິ່ງໃດສິ່ງໜຶ່ງ. ບາງຄົນອາດຄິດແຕກຕ່າງ, ແຕ່ເຮົາຮູ້ສຶກຢູ່ສະເໝີວ່າ ພຣະວິນຍານບໍລິສຸດແມ່ນພຽງປະຕິບັດຂັ້ນຕອນຂອງພາລະກິດເທົ່ານັ້ນ ເຊິ່ງເປັນພາລະກິດແຫ່ງຄວາມລອດພົ້ນ ແລະ ບໍ່ແມ່ນພາລະກິດອື່ນໃດ. ສິ່ງນີ້ຄວນຈະຊັດເຈນ. ມີແຕ່ຕອນນີ້ເທົ່ານັ້ນ ພາລະກິດຂອງພຣະວິນຍານບໍລິສຸດໃນປະເທດຈີນແຜ່ນດິນໃຫຍ່ຈຶ່ງຈະຊັດເຈນ. ແລ້ວເປັນຫຍັງພຣະເຈົ້າຈຶ່ງຕ້ອງການເປີດເຜີຍທຸກເສັ້ນທາງ ແລະ ພາລະກິດໃນສະຖານທີ່ເຊັ່ນນີ້ ເຊິ່ງເປັນບ່ອນທີ່ເຕັມໄປດ້ວຍຜີຮ້າຍ. ນີ້ສະແດງວ່າ ຄວາມຈິງແລ້ວ ພຣະເຈົ້າກຳລັງປະຕິບັດພາລະກິດແຫ່ງຄວາມລອດພົ້ນ. ເວົ້າໃຫ້ຊັດເຈນກວ່ານີ້ກໍຄື, ມັນຄືພາລະກິດແຫ່ງການເອົາຊະນະໂດຍສະເພາະ. ນາມຂອງພຣະເຢຊູໄດ້ຖືກເອີ້ນຫາຕັ້ງແຕ່ຕອນເລີ່ມຕົ້ນ. (ບາງເທື່ອ ບາງຄົນບໍ່ໄດ້ພະເຊີນກັບມັນ, ແຕ່ເຮົາເວົ້າວ່າ ນີ້ຄືບາດກ້າວຂອງພາລະກິດຂອງພຣະວິນຍານບໍລິສຸດ). ນີ້ແມ່ນເພື່ອເປັນການແຍກອອກຈາກພຣະເຢຊູໃນຍຸກແຫ່ງພຣະຄຸນ, ສະນັ້ນ ຜູ້ຄົນສ່ວນໜຶ່ງຈຶ່ງຖືກເລືອກລ່ວງໜ້າ ແລະ

ຫຼັງຈາກນັ້ນ ການຄັດເລືອກຈຶ່ງໄດ້ຈຳກັດສະເພາະບາງຄົນ. ແລ້ວຕໍ່ມາ ຊື່ຂອງພະຍານລີກໍຖືກເອີ້ນຫາໃນປະເທດຈີນແຜ່ນດິນໃຫຍ່ ເຊິ່ງເປັນພາກສ່ວນທີສອງຂອງພາລະກິດແຫ່ງການຟື້ນຟູຂອງພຣະວິນຍານບໍລິສຸດໃນປະເທດຈີນແຜ່ນດິນໃຫຍ່. ນີ້ຄືບາດກ້າວທຳອິດຂອງພາລະກິດທີ່ພຣະວິນຍານບໍລິສຸດເລີ່ມຄັດເລືອກເອົາຜູ້ຄົນ ເຊິ່ງທຳອິດແມ່ນຮວບຮວມຜູ້ຄົນ ແລະ ລໍຖ້າໃຫ້ຄົນລ້ຽງແກະເບິ່ງແຍງພວກເຂົາ; ຊື່ "ພະຍານລີ" ແມ່ນຖືກໃຊ້ເພື່ອປະຕິບັດໜ້າທີ່ນັ້ນ. ພຣະເຈົ້າໄດ້ປະຕິບັດພາລະກິດຂອງພຣະອົງດ້ວຍຕົນເອງ ຫຼັງຈາກທີ່ໄດ້ປະຈັກພະຍານນາມ "ຜູ້ຊົງລິດອຳນາດ" ແລະ ກ່ອນໜ້ານັ້ນ ພາລະກິດແມ່ນຢູ່ໃນຂັ້ນຕອນການກະກຽມ. ສະນັ້ນ ມັນບໍ່ສຳຄັນວ່າສິ່ງນັ້ນຖືກຕ້ອງ ຫຼື ຜິດ ແລະ ນີ້ບໍ່ແມ່ນບັນຫາຫຼັກທີ່ຢູ່ພາຍໃນແຜນການຂອງພຣະເຈົ້າ. ຫຼັງຈາກທີ່ໄດ້ປະຈັກນາມ "ຜູ້ຊົງລິດອຳນາດ", ພຣະເຈົ້າຈຶ່ງເລີ່ມຕົ້ນປະຕິບັດພາລະກິດຂອງພຣະອົງເອງຢ່າງເປັນທາງການ ແລະ ຫຼັງຈາກນັ້ນ ການກະທຳຂອງພຣະອົງໃນຖານະພຣະເຈົ້າທີ່ຢູ່ໃນເນື້ອໜັງຈຶ່ງເລີ່ມຕົ້ນຢ່າງເປັນທາງການ. ຜ່ານນາມ "ພຣະຜູ້ເປັນເຈົ້າທີ່ຊົງລິດອຳນາດ", ພຣະອົງໄດ້ຄວບຄຸມທຸກຄົນທີ່ກະບົດ ແລະ ບໍ່ເຊື່ອຟັງ. ພວກເຂົາເລີ່ມຍອມຮັບເອົາພາບລັກຂອງຄວາມເປັນມະນຸດ, ດັ່ງທີ່ຜູ້ຄົນເລີ່ມເບິ່ງຄືກັບວ່າ ເປັນຜູ້ໃຫຍ່ ເມື່ອພວກເຂົາອາຍຸຮອດຊາວສາມ ຫຼື ຊາວສີ່ປີ; ນັ້ນກໍຄື ຜູ້ຄົນຫາກໍເລີ່ມມີຊີວິດຂອງມະນຸດປົກກະຕິ. ຜ່ານການທົດລອງຂອງຜູ້ຮັບໃຊ້ບໍລິການ, ພາລະກິດຂອງພຣະເຈົ້າຈຶ່ງປ່ຽນແປງໄປສູ່ໄລຍະຂອງການປະຕິບັດພາລະກິດອັນສັກສິດໂດຍທຳມະຊາດ. ສາມາດເວົ້າໄດ້ວ່າ ມີແຕ່ຂັ້ນຕອນນີ້ຂອງພາລະກິດເທົ່ານັ້ນທີ່ເປັນແກ່ນສຳຄັນໃນພາລະກິດຂອງພຣະອົງ ແລະ ມັນຄືບາດກ້າວຫຼັກໃນພາລະກິດຂອງພຣະອົງ. ຜູ້ຄົນຮູ້ຈັກຕົນເອງ ແລະ ກຽດຊັງຕົນເອງ. ພວກເຂົາໄດ້ໄປເຖິງຈຸດທີ່ພວກເຂົາສາມາດສາບແຊ່ງຕົນເອງ, ພວກເຂົາຍິນດີທີ່ຈະສະຫຼະຊີວິດຂອງພວກເຂົາເອງ ແລະ ພວກເຂົາມີຄວາມຮູ້ສຶກທີ່ເລືອນລາງກ່ຽວກັບຄວາມເປັນຕາຮັກຂອງພຣະເຈົ້າ, ບົນພື້ນຖານນັ້ນ ພວກເຂົາໄດ້ມາຮູ້ຈັກຄວາມໝາຍທີ່ແທ້ຈິງຂອງການເປັນຢູ່ຂອງມະນຸດ, ແລ້ວກໍໄດ້ບັນລຸຄວາມປະສົງຂອງພຣະເຈົ້າ. ພາລະກິດຂອງພຣະເຈົ້າໃນປະເທດຈີນແຜ່ນດິນໃຫຍ່ກຳລັງໃກ້ຈະສິ້ນສຸດ. ພຣະເຈົ້າໄດ້ດຳເນີນການກະກຽມຂອງພຣະອົງໃນດິນແດນທີ່ສົກກະປົກນີ້ມາເປັນເວລາຫຼາຍປີ, ແຕ່ຜ່ານມາຜູ້ຄົນບໍ່ເຄີຍບັນລຸເຖິງຈຸດທີ່ພວກເຂົາໄດ້ບັນລຸໃນຕອນນີ້ເລີຍ ເຊິ່ງໝາຍຄວາມວ່າ ມັນແມ່ນຢູ່ໃນປັດຈຸບັນເທົ່ານັ້ນທີ່ ພຣະເຈົ້າເລີ່ມຕົ້ນພາລະກິດຂອງພຣະອົງຢ່າງເປັນທາງການ. ບໍ່ຈຳເປັນຕ້ອງປະດັບສິ່ງດ້ວຍລາຍລະອຽດ ຫຼື ຄວາມຊັດເຈນເພີ່ມເຕີມ. ມັນຖືກຕ້ອງໂດຍສິ້ນເຊີງທີ່ຈະເວົ້າວ່າ ພາລະກິດນີ້ແມ່ນຖືກປະຕິບັດຜ່ານຄວາມເປັນພຣະເຈົ້າຂອງພຣະເຈົ້າໂດຍກົງ, ແຕ່ມັນຖືກດຳເນີນຜ່ານທາງມະນຸດ. ບໍ່ມີຜູ້ໃດສາມາດປະຕິເສດສິ່ງນີ້ໄດ້. ແນ່ນອນ ມັນແມ່ນຍ້ອນລິດອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າເທິງແຜ່ນດິນໂລກທີ່ ພາລະກິດຂອງພຣະອົງຈຶ່ງສາມາດບັນລຸເຖິງຂັ້ນປັດຈຸບັນໃນຜູ້ຄົນແຫ່ງດິນແດນທີ່ໄຮ້ສິນທຳນີ້. ຜົນຂອງພາລະກິດນີ້ສາມາດນຳໄປໃສກໍໄດ້ເພື່ອຈູງໃຈຜູ້ຄົນ. ບໍ່ມີຜູ້ໃດຈະກ້າຕັດສິນສິ່ງນີ້ ແລະ ປະຕິເສດມັນໄດ້ຢ່າງງ່າຍດາຍ.

# ເສັ້ນທາງ... (2)

ອ້າຍເອື້ອຍນ້ອງຂອງພວກເຮົາອາດມີແນວຄິດບາງຢ່າງກ່ຽວກັບລຳດັບ, ບາດກ້າວ ແລະ ວິທີການຂອງພາລະກິດຂອງພຣະເຈົ້າໃນປະເທດຈີນແຜ່ນດິນໃຫຍ່, ແຕ່ເຮົາຍັງຄິດວ່າ ມັນສົມຄວນທີ່ຈະຍ້ອນກັບໄປເບິ່ງສິ່ງເຫຼົ່ານັ້ນ ຫຼື ໃຫ້ຂໍ້ສະຫຼຸບແກ່ເຈົ້າຢ່າງໄວ. ເຮົາຈະໃຊ້ໂອກາດນີ້ເພື່ອເວົ້າເຖິງສິ່ງທີ່ຢູ່ໃນຫົວໃຈຂອງເຮົາເທົ່ານັ້ນ ແລະ ເຮົາຈະບໍ່ເວົ້າເຖິງເລື່ອງຕ່າງໆທີ່ຢູ່ນອກເໜືອພາລະກິດນີ້. ເຮົາຫວັງວ່າອ້າຍເອື້ອຍນ້ອງພວກເຮົາຈະສາມາດເຂົ້າໃຈຄວາມຮູ້ສຶກຂອງເຮົາ ແລະ ເຮົາຮຽກຮ້ອງຢ່າງຖ່ອມຕົນໃຫ້ທຸກຄົນທີ່ອ່ານພຣະທຳຂອງເຮົາໄດ້ເຂົ້າໃຈ ແລະ ໃຫ້ອະໄພການມີວຸດທິພາວະຕໍ່າຂອງເຮົາ, ຄວາມບໍ່ພຽງພໍຂອງປະສົບການໃນຊີວິດຂອງເຮົາ ແລະ ຄວາມບໍ່ສາມາດຂອງເຮົາທີ່ຈະພູມໃຈໃນຕົນເອງຢູ່ຕໍ່ໜ້າພຣະເຈົ້າ. ຢ່າງໃດກໍຕາມ, ຄວາມຮູ້ສຶກຂອງເຮົາກໍຄື ສິ່ງເຫຼົ່ານີ້ແມ່ນເຫດຜົນທີ່ເປັນຈິງ. ສະຫຼຸບກໍຄື ບໍ່ວ່າແມ່ນຫຍັງກໍຕາມ, ບໍ່ມີຜູ້ໃດ, ເຫດການໃດ ຫຼື ສິ່ງໃດສາມາດຢຸດພວກເຮົາບໍ່ໃຫ້ສົນທະນາກັນຕໍ່ໜ້າພຣະເຈົ້າ ແລະ ເຮົາຫວັງວ່າອ້າຍເອື້ອຍນ້ອງຂອງພວກເຮົາຈະສາມາດຮ່ວມກັບເຮົາເພື່ອປະຕິບັດພາລະກິດຕໍ່ໜ້າພຣະເຈົ້າໜັກຂຶ້ນ. ເຮົາຕ້ອງການທີ່ຈະຖວາຍຄຳອະທິຖານດັ່ງຕໍ່ໄປນີ້: "ໂອ ພຣະເຈົ້າ! ຂໍໂຜດມີຄວາມເມດຕາຕໍ່ພວກຂ້ານ້ອຍ ເພື່ອວ່າຂ້ານ້ອຍ ແລະ ອ້າຍເອື້ອຍນ້ອງຂອງຂ້ານ້ອຍຈະໄດ້ດົ້ນດົ້ນໄປພ້ອມກັນພາຍໃຕ້ອຳນາດໃນອຸດົມຄະຕິຂອງພວກຂ້ານ້ອຍ, ຊື່ສັດຕໍ່ພຣະອົງຈົນເຖິງແກ່ຄວາມຕາຍ ແລະ ບໍ່ເສຍໃຈໃດໆເລີຍ!" ພຣະທຳເຫຼົ່ານີ້ຄືຄວາມຕັ້ງໃຈຂອງເຮົາຕໍ່ໜ້າພຣະເຈົ້າ, ແຕ່ມັນຍັງສາມາດເວົ້າໄດ້ວ່າ ພຣະທຳເຫຼົ່ານັ້ນຄືຄະຕິຂອງເຮົາເອງ ໃນຖານະຄົນທີ່ມີເນື້ອໜັງ ທີ່ຖືກໃຊ້ໂດຍພຣະເຈົ້າ. ເຮົາໄດ້ແບ່ງປັນພຣະທຳເຫຼົ່ານີ້ໃນການສົນທະນາກັບອ້າຍເອື້ອຍນ້ອງທີ່ຢູ່ຄຽງຂ້າງເຮົາຫຼາຍຄັ້ງ ແລະ ເຮົາໄດ້ມອບພຣະທຳເຫຼົ່ານັ້ນໃຫ້ແກ່ຄົນທີ່ຢູ່ຄຽງຂ້າງເຮົາເພື່ອເປັນຂໍ້ຄວາມ. ເຮົາບໍ່ຮູ້ວ່າຜູ້ຄົນຄິດແນວໃດກັບພຣະທຳເຫຼົ່ານັ້ນ, ແຕ່ບໍ່ວ່າຫຍັງກໍຕາມ ເຮົາເຊື່ອວ່າພຣະທຳເຫຼົ່ານີ້ບໍ່ພຽງແຕ່ມີລັກສະນະຂອງຄວາມພະຍາຍາມສ່ວນຕົວ, ແຕ່ຍິ່ງໄປກວ່ານັ້ນ ພຣະທຳເຫຼົ່ານັ້ນຍັງມີລັກສະນະຂອງທິດສະດີທີ່ອີງຕາມຄວາມເປັນຈິງ. ຍ້ອນສິ່ງນີ້, ມັນຈຶ່ງອາດເປັນໄປໄດ້ທີ່ບາງຄົນຈະມີຄວາມຄິດເຫັນບາງຢ່າງ ແລະ ມັນຈະດີສຳລັບເຈົ້າທີ່ຈະຖືເອົາພຣະທຳເຫຼົ່ານີ້ເປັນຄະຕິຂອງເຈົ້າ ແລະ ເບິ່ງວ່າແຮງຜັກດັນຂອງເຈົ້າທີ່ຈະຮັກພຣະເຈົ້ານັ້ນຍິ່ງໃຫຍ່ສໍ່າໃດ. ບາງຄົນຈະມີແນວຄິດບາງຢ່າງ ເມື່ອພວກເຂົາໄດ້ອ່ານພຣະທຳເຫຼົ່ານີ້ ແລະ ຄິດວ່າ: "ສິ່ງດັ່ງກ່າວທີ່ເກີດຂຶ້ນທຸກມື້ ແລະ ເປັນປົກກະຕິຈະເຮັດໃຫ້ມີແຮງຜັກດັນອັນຍິ່ງໃຫຍ່ແກ່ຜູ້ຄົນເພື່ອຮັກພຣະເຈົ້າຈົນຕາຍໄດ້ແນວໃດ? ແລ້ວມັນບໍ່ກ່ຽວຂ້ອງຫຍັງກັບຫົວຂໍ້ທີ່ພວກເຮົາກຳລັງສົນທະນາກັນ ນັ້ນກໍຄື 'ເສັ້ນທາງ'". ເຮົາຮູ້ວ່າພຣະທຳເຫຼົ່ານີ້ອາດບໍ່ຈັບໃຈໂດຍສະເພາະ, ແຕ່ເຮົາຄິດຢູ່ສະເໝີວ່າ ພຣະທຳເຫຼົ່ານີ້ສາມາດນຳພາຜູ້ຄົນໄປສູ່ເສັ້ນທາງທີ່ຖືກຕ້ອງ ແລະ ເຮັດໃຫ້ພວກເຂົາໄດ້ຜ່ານການທົດລອງທຸກປະເພດຕະຫຼອດເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າ ໂດຍບໍ່ເສຍໃຈ ຫຼື ຖອຍຫຼັງກັບ. ນີ້ຄືເຫດຜົນທີ່ວ່າເປັນຫຍັງເຮົາຈຶ່ງປະຕິບັດຕໍ່ພຣະທຳເຫຼົ່ານີ້ຄືກັບຄະຕິຂອງເຮົາ. ເຮົາຫວັງວ່າ ຜູ້ຄົນກໍຈະຄິດໄຕ່ຕອງພຣະທຳເຫຼົ່ານັ້ນຢ່າງເອົາໃຈໃສ່ເຊັ່ນກັນ. ເຖິງຢ່າງໃດກໍຕາມ,

ເຈດຕະນາຂອງເຮົາບໍ່ແມ່ນເພື່ອບັງຄັບໃຫ້ທຸກຄົນຍອມຮັບມຸມມອງຂອງເຮົາເອງ, ນີ້ເປັນພຽງຄຳແນະນຳ. ບໍ່ວ່າຄົນອື່ນຈະຄິດແນວໃດກໍຕາມກ່ຽວກັບເຮົາ, ເຮົາຄິດວ່າພຣະເຈົ້າເຂົ້າໃຈພະລັງທີ່ຢູ່ພາຍໃນພວກເຮົາທຸກຄົນ. ພຣະເຈົ້າປະຕິບັດພາລະກິດໃນພວກເຮົາແຕ່ລະຄົນຢ່າງສະໝໍ່າສະເໝີ ແລະ ພາລະກິດຂອງພຣະອົງກໍບໍ່ຢຸດຢັ້ງ. ເພາະພວກເຮົາທຸກຄົນເກີດໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່, ພຣະອົງຈຶ່ງປະຕິບັດພາລະກິດໃນພວກເຮົາດ້ວຍວິທີນີ້. ຄົນທີ່ເກີດໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ແມ່ນໂຊກດີທີ່ຈະໄດ້ຮັບພາລະກິດນີ້ຂອງພຣະວິນຍານບໍລິສຸດ. ໃນຖານະທີ່ເຮົາກໍເປັນໜຶ່ງໃນພວກເຂົາ, ເຮົາມີຄວາມຮູ້ສຶກຢ່າງໃຫຍ່ເຖິງຄວາມໜ້າຮັກ, ຄວາມຄຸ້ມຄ່າໃນການເຄົາລົບ ແລະ ຄວາມເປັນຕາຮັກຂອງພຣະເຈົ້າ. ນີ້ຄືການທີ່ພຣະເຈົ້າຫ່ວງໃຍເຮົາ. ການທີ່ຈັກກະພັດທີ່ຫຼ້າຫຼັງ, ຫົວບູຮານ, ສັກດີນາ, ງົມງວາຍ ແລະ ຊົ່ວຊ້າຂອງຊົນຊັ້ນກຳມະກອນ ສາມາດໄດ້ຮັບພາລະກິດດັ່ງກ່າວຈາກພຣະເຈົ້າກໍສະແດງໃຫ້ເຫັນວ່າ ພວກເຮົາ ເຊິ່ງເປັນຄົນກຸ່ມນີ້ໃນຍຸກສຸດທ້າຍ ໄດ້ຮັບພອນສໍ່າໃດແລ້ວ. ຍ້ອນເຫດຜົນນີ້ ເຮົາເຊື່ອວ່າອ້າຍເອື້ອຍນ້ອງທຸກຄົນທີ່ໄດ້ມີນຕາຝ່າຍວິນຍານຂອງພວກເຂົາເພື່ອເຫັນພາລະກິດນີ້ຈະຮ້ອງໄຫ້ດ້ວຍນໍ້າຕາແຫ່ງຄວາມປິຕິຍິນດີ. ແລ້ວໃນເວລານັ້ນ ເຈົ້າຈະບໍ່ສະແດງຕົນເອງຕໍ່ພຣະເຈົ້າໂດຍການເຕັ້ນລຳດ້ວຍຄວາມປິຕິຍິນດີບໍ? ເຈົ້າຈະບໍ່ມອບຖວາຍບົດເພງໃນຫົວໃຈຂອງເຈົ້າຕໍ່ພຣະເຈົ້າບໍ? ໃນເວລານັ້ນ, ເຈົ້າຈະບໍ່ສະແດງຄວາມຕັ້ງໃຈຂອງເຈົ້າຕໍ່ພຣະເຈົ້າ ແລະ ສ້າງອີກແຜນການໜຶ່ງຕໍ່ໜ້າພຣະອົງບໍ? ເຮົາຄິດວ່າ ທຸກສິ່ງເຫຼົ່ານີ້ແມ່ນສິ່ງທີ່ຄົນປົກກະຕິທີ່ເຊື່ອໃນພຣະເຈົ້າຄວນເຮັດ. ໃນຖານະມະນຸດ, ເຮົາເຊື່ອວ່າ ພວກເຮົາທຸກຄົນຄວນມີການສະແດງອອກບາງຢ່າງຕໍ່ໜ້າພຣະເຈົ້າ. ນີ້ຄືສິ່ງທີ່ບຸກຄົນໃດໜຶ່ງທີ່ມີຄວາມຮູ້ສຶກຄວນເຮັດ. ສັງເກດເບິ່ງຄວາມສາມາດຂອງທຸກຄົນໃນບັນດາພວກເຮົາ ແລະ ສະຖານທີ່ໆພວກເຮົາເກີດ ນີ້ສະແດງໃຫ້ເຫັນວ່າ ພຣະເຈົ້າຕ້ອງອົດກັ້ນກັບຄວາມອັບອາຍຫຼາຍສໍ່າໃດເພື່ອມາຢູ່ທ່າມກາງພວກເຮົາ. ພວກເຮົາອາດມີຄວາມຮູ້ບາງຢ່າງກ່ຽວກັບພຣະເຈົ້າທີ່ຢູ່ພາຍໃນພວກເຮົາ, ແຕ່ສິ່ງທີ່ພວກເຮົາຮູ້ວ່າ ພຣະເຈົ້າຍິ່ງໃຫຍ່ຫຼາຍ, ສູງສົ່ງຫຼາຍ ແລະ ມີກຽດຫຼາຍກໍພຽງພໍທີ່ຈະເນັ້ນວ່າ ການທົນທຸກຂອງພຣະອົງໃນທ່າມກາງມະນຸດຊາດນັ້ນຍິ່ງໃຫຍ່ສໍ່າໃດ. ແຕ່ພຣະທຳເຫຼົ່ານີ້ຂອງເຮົາກໍຍັງບໍ່ຊັດແຈ້ງ ແລະ ຜູ້ຄົນສາມາດພຽງແຕ່ປະຕິບັດຕໍ່ພຣະທຳເຫຼົ່ານີ້ຄືກັບຕົວອັກສອນ ແລະ ທິດສະດີ, ຍ້ອນຜູ້ຄົນທີ່ຢູ່ໃນທ່າມກາງພວກເຮົາແມ່ນໄຮ້ຄວາມຮູ້ສຶກ ແລະ ໂງ່ຈ້າເກີນໄປ. ສະນັ້ນ ທາງເລືອກດຽວຂອງເຮົາກໍຄືໃຊ້ຄວາມພະຍາຍາມຫຼາຍຂຶ້ນເພື່ອອະທິບາຍບັນຫານີ້ຕໍ່ອ້າຍເອື້ອຍນ້ອງທຸກຄົນທີ່ຈະຍອມຮັບເອົາມັນ, ເພື່ອວ່າວິນຍານຂອງເຮົາຈະສາມາດຖືກດົນບັນດານໂດຍພຣະວິນຍານຂອງພຣະເຈົ້າ. ຂໍໃຫ້ພຣະເຈົ້າເປີດຕາຝ່າຍວິນຍານຂອງພວກເຮົາ, ເພື່ອວ່າພວກເຮົາຈະໄດ້ເຫັນເຖິງລາຄາທີ່ພຣະເຈົ້າໄດ້ຈ່າຍ, ຄວາມພະຍາຍາມທີ່ພຣະອົງໄດ້ເຮັດ ແລະ ກຳລັງທີ່ພຣະອົງໄດ້ເສຍສະຫຼະເພື່ອພວກເຮົາ.

ໃນຖານະໜຶ່ງໃນບັນດາຄົນທີ່ຢູ່ໃນປະເທດຈີນແຜ່ນດິນໃຫຍ່ທີ່ໄດ້ຍອມຮັບເອົາພຣະວິນຍານຂອງພຣະເຈົ້າ, ເຮົາມີຄວາມຮູ້ສຶກຢ່າງເລິກເຊິ່ງວ່າຄວາມສາມາດຂອງເຮົານັ້ນຂາດເຂີນສໍ່າໃດແທ້. (ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງພວກເຮົາບໍ່ຮູ້ສຶກບໍ່ດີຍ້ອນສິ່ງນີ້, ນີ້ຄືຄວາມເປັນຈິງຂອງສະຖານະການ).

ໃນຊີວິດທີ່ເປັນຈິງຂອງເຮົາ, ເຮົາໄດ້ເຫັນຢ່າງຊັດເຈນແລ້ວວ່າ ສິ່ງທີ່ພວກເຮົາມີແມ່ນລ້ວນແລ້ວແຕ່ຫຼ້າຫຼັງຫຼາຍ. ໃນດ້ານໃຫຍ່, ມັນແມ່ນວິທີທີ່ພວກເຮົາປະພຶດຕົນເອງໃນຊີວິດຂອງພວກເຮົາ ແລະ ຄວາມສຳພັນຂອງພວກເຮົາກັບພຣະເຈົ້າ ແລະ ໃນດ້ານເລັກນ້ອຍ, ມັນຄືແນວຄິດ ແລະ ຄວາມຄິດທຸກຢ່າງຂອງພວກເຮົາ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນສິ່ງທີ່ມີຢູ່ຢ່າງຖືກຕ້ອງ ແລະ ພວກມັນແມ່ນຍາກທີ່ຈະປິດບັງດ້ວຍຄຳເວົ້າ ຫຼື ການປອມແປງ. ສະນັ້ນ ເມື່ອເຮົາເວົ້າສິ່ງນີ້, ຄົນສ່ວນໃຫຍ່ກໍຈຶ່ງຫົວຂອງພວກເຂົາ ແລະ ຮັບຮູ້ມັນ ແລະ ເຊື່ອໝັ້ນໃນສິ່ງນັ້ນ, ນອກຈາກວ່າພວກເຂົາຈະຂາດເຫດຜົນປົກກະຕິ: ຄົນດັ່ງກ່າວແມ່ນບໍ່ສາມາດຍອມຮັບມຸມມອງເຫຼົ່ານີ້ຂອງເຮົາ. ບາງເທື່ອ ເຮົາບໍ່ສຸພາບເກີນໄປ ທີ່ໜ້າດ້ານກ່າວວ່າຜູ້ຄົນເຫຼົ່ານີ້ເປັນສັດເດຍລະສານ. ນັ້ນກໍຍ້ອນ ໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ພວກເຂົາແມ່ນຄົນທີ່ຕໍ່າຕ້ອຍທີ່ສຸດຂອງບັນດາຄົນທີ່ຕ້ອຍຕໍ່າ, ຄືກັບໝູ ຫຼື ໝາ. ບໍ່ມີຜູ້ໃດຈະຂາດຄວາມສາມາດໄປຫຼາຍກວ່ານີ້; ພວກເຂົາບໍ່ສົມຄວນມາຢູ່ຕໍ່ໜ້າພຣະເຈົ້າ. ບາງເທື່ອ ມັນອາດເປັນຍ້ອນພຣະທຳຂອງເຮົາ "ໂອ້ອວດ" ເກີນໄປ. ໃນການເປັນຕົວແທນໃຫ້ກັບພຣະວິນຍານຂອງພຣະເຈົ້າທີ່ກຳລັງປະຕິບັດພາລະກິດໃນຕົວເຮົາ, ເຮົາສາບແຊ່ງສິ່ງຖືກສ້າງທີ່ເປັນຄືກັບສັດ ແລະ ສົກກະປົກແບບນີ້ ແລະ ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາຈະບໍ່ອ່ອນແອຍ້ອນສິ່ງນີ້. ມັນອາດຈະບໍ່ມີຜູ້ຄົນດັ່ງກ່າວຢູ່ທ່າມກາງພວກເຮົາ, ແຕ່ບໍ່ວ່າຄວາມຈິງຈະເປັນແນວໃດກໍຕາມ, ເຮົາເຊື່ອວ່າ ນີ້ຄືວິທີທີ່ຄວນປະຕິບັດກັບຜູ້ຄົນດັ່ງກ່າວ. ເຈົ້າຄິດວ່າແນວໃດ?

ຈັກກະພົບຂອງມັງກອນແດງທີ່ຍິ່ງໃຫຍ່ໄດ້ມີມາເປັນເວລາສອງສາມພັນປີ ແລະ ມັນໄດ້ຊົ່ວຊ້າຕະຫຼອດມາ ແລະ ຍ້ອນມັນໄດ້ຕໍ່ຕ້ານພຣະເຈົ້າຕະຫຼອດເວລານີ້, ມັນຈຶ່ງໄດ້ພົບກັບຄຳສາບແຊ່ງ ແລະ ຄວາມໂກດຮ້າຍຂອງພຣະເຈົ້າ ແລ້ວຫຼັງຈາກນັ້ນ ກໍຖືກຂ້ຽນຕີໂດຍພຣະເຈົ້າ. ຖືກສາບແຊ່ງໂດຍພຣະເຈົ້າ, ປະເທດນີ້ຈຶ່ງໄດ້ປະສົບກັບການແບ່ງແຍກດ້ານເຊື້ອຊາດ ແລະ ຍັງຄົງຢູ່ໃນສະພາວະທີ່ຫຼ້າຫຼັງ. ຍ້ອນເຫດຜົນນີ້ ປະເທດທີ່ພວກເຮົາເກີດຈຶ່ງເຕັມໄປດ້ວຍຜີຮ້າຍທີ່ສົກກະປົກທຸກປະເພດ ທີ່ດີ້ດ້ານໃນການສະແຫວງຫາອຳນາດຂອງພວກເຂົາ ເຊິ່ງໝາຍຄວາມວ່າ ພວກມັນໄດ້ທຳລາຍຄົນທີ່ເກີດໃນປະເທດນີ້. ນິໄສ, ປະເພນີ, ຄວາມຄິດ ແລະ ແນວຄິດຂອງຜູ້ຄົນແມ່ນຫຼ້າຫຼັງ ແລະ ຫົວບູຮານ, ສະນັ້ນພວກເຂົາຈຶ່ງສ້າງແນວຄິດທຸກປະເພດກ່ຽວກັບພຣະເຈົ້າ ເຊິ່ງພວກເຂົາບໍ່ສາມາດປ່ອຍວາງຈົນເຖິງປັດຈຸບັນນີ້. ໂດຍສະເພາະແລ້ວ, ພວກເຂົາປະຕິບັດຢ່າງໜຶ່ງເມື່ອຢູ່ຕໍ່ໜ້າພຣະເຈົ້າ ແລະ ປະຕິບັດອີກຢ່າງລັບຫຼັງພຣະອົງ, ເຂົ້າໃຈຜິດວ່າການບູຊາຊາຕານແມ່ນການຮັບໃຊ້ພຣະເຈົ້າ ເຊິ່ງສະແດງວ່າພວກເຂົາເປັນຄົນທີ່ຫຼ້າຫຼັງທີ່ສຸດໃນບັນດາຄົນທັງປວງ. ພຣະເຈົ້າໄດ້ປະຕິບັດພາລະກິດຫຼາຍຢ່າງໃນປະເທດຈີນແຜ່ນດິນໃຫຍ່ ແລະ ໄດ້ກ່າວພຣະທຳຂອງພຣະອົງຫຼາຍຂໍ້, ແຕ່ຜູ້ຄົນຍັງບໍ່ມີຄວາມຮູ້ສຶກ ແລະ ບໍ່ສົນໃຈຫຍັງທັງສິ້ນ. ພວກເຂົາຍັງປະຕິບັດພາລະກິດທີ່ພວກເຂົາປະຕິບັດມາກ່ອນ ແລະ ພວກເຂົາບໍ່ມີຄວາມເຂົ້າໃຈກ່ຽວກັບພຣະທຳຂອງພຣະເຈົ້າຢ່າງແທ້ຈິງ. ເມື່ອພຣະເຈົ້າປະກາດວ່າ ບໍ່ມີອະນາຄົດ ແລະ ບໍ່ມີຄວາມຫວັງ, ຄຣິສຕະຈັກທີ່ມີຊີວິດຊີວາດ້ວຍຄວາມຮ້ອນຂອງລະດູຮ້ອນກໍຕົກເປັນລະດູໜາວທີ່ເຢືອກເຢັນທັນທີ. ຕົວຕົນທີ່ແທ້ຈິງຂອງຜູ້ຄົນແມ່ນຖືກເປີດໂປງສູ່ສາທາລະນະ ແລະ ຄວາມໝັ້ນໃຈ,

ຄວາມຮັກ ແລະ ກຳລັງຜ່ານມາຂອງພວກເຂົາກໍຫາຍໄປທັງໝົດ ໂດຍບໍ່ມີຮ່ອງຮອຍ. ແລ້ວມື້ນີ້ ກໍບໍ່ມີຜູ້ໃດໃນບັນດາພວກເຂົາໄດ້ຟື້ນຟູຊີວິດຂອງພວກເຂົາໄດ້ເລີຍ. ພວກເຂົາເວົ້າວ່າ ພວກເຂົາຮັກພຣະເຈົ້າ ແລະ ເຖິງແມ່ນ ພວກເຂົາບໍ່ກ້າຕໍ່ວ່າໃນຫົວໃຈຂອງພວກເຂົາ, ບໍ່ວ່າຫຍັງກໍຕາມ, ພວກເຂົາກໍບໍ່ໄດ້ມີຄວາມຮັກນັ້ນແທ້ຈິງ. ນັ້ນໝາຍຄວາມວ່າແນວໃດ? ເຮົາຄິດວ່າ ອ້າຍເອື້ອຍນ້ອງຂອງພວກເຮົາຈະຮັບຮູ້ຂໍ້ແທ້ຈິງນີ້. ຂໍໃຫ້ພຣະເຈົ້າມອບແສງສະຫວ່າງແກ່ພວກເຮົາ, ເພື່ອວ່າພວກເຮົາທຸກຄົນຈະສາມາດຮູ້ຈັກຄວາມເປັນຕາຮັກຂອງພຣະອົງ, ຮັກພຣະເຈົ້າຂອງພວກເຮົາໃນສ່ວນເລິກຂອງຫົວໃຈຂອງພວກເຮົາ ແລະ ສະແດງຄວາມຮັກຂອງພວກເຮົາຕໍ່ພຣະເຈົ້າໃນມຸມມອງທີ່ແຕກຕ່າງກັນ; ຂໍໃຫ້ພຣະເຈົ້າປະທານຫົວໃຈທີ່ໝັ້ນຄົງທີ່ມີຄວາມຮັກແທ້ຈິງສຳລັບພຣະອົງໃຫ້ແກ່ພວກເຮົາ, ນີ້ຄືສິ່ງທີ່ເຮົາຫວັງ. ເມື່ອໄດ້ເວົ້າສິ່ງນີ້, ເຮົາກໍຮູ້ສຶກເຫັນອົກເຫັນໃຈອ້າຍເອື້ອຍນ້ອງຂອງເຮົາທີ່ເກີດໃນດິນແດນທີ່ສົກກະປົກນີ້ເຊັ່ນກັນ ແລະ ສະນັ້ນ ຄວາມກຽດຊັງຕໍ່ມັງກອນແດງທີ່ຍິ່ງໃຫຍ່ຈຶ່ງເພີ່ມຂຶ້ນພາຍໃນເຮົາ. ມັນໄດ້ກີດຂວາງຄວາມຮັກຂອງພວກເຮົາສຳລັບພຣະເຈົ້າ ແລະ ຊັກຈູງຄວາມໂລພາຂອງພວກເຮົາສຳລັບຄວາມຄາດຫວັງໃນອະນາຄົດຂອງພວກເຮົາ. ມັນລໍ້ລວງໃຫ້ພວກເຮົາຄິດລົບ ແລະ ຕໍ່ຕ້ານພຣະເຈົ້າ. ມັນຄືມັງກອນແດງທີ່ຍິ່ງໃຫຍ່ທີ່ໄດ້ລໍ້ລວງພວກເຮົາ, ເຮັດໃຫ້ພວກເຮົາເສື່ອມຊາມ ແລະ ທຳລາຍລ້າງພວກເຮົາຈົນເຖິງປັດຈຸບັນ, ຈົນເຖິງຈຸດທີ່ພວກເຮົາບໍ່ສາມາດຕອບແທນຄວາມຮັກຂອງພຣະເຈົ້າດ້ວຍຫົວໃຈຂອງພວກເຮົາ. ພວກເຮົາມີແຮງຜັກດັນໃນຫົວໃຈຂອງພວກເຮົາ, ແມ່ນແຕ່ຕົວພວກເຮົາເອງ, ພວກເຮົາກໍບໍ່ມີອຳນາດ. ພວກເຮົາທຸກຄົນເປັນເຫຍື່ອຂອງມັນ. ຍ້ອນເຫດຜົນນີ້, ເຮົາຈຶ່ງກຽດຊັງມັນຈົນເຂົ້າກະດູກຂອງເຮົາແທ້ໆ ແລະ ເຮົາບໍ່ສາມາດລໍຖ້າທີ່ຈະທຳລາຍມັນ. ເຖິງຢ່າງໃດກໍຕາມ, ເມື່ອເຮົາຄິດອີກຄັ້ງ, ສິ່ງນີ້ຈະບໍ່ມີປະໂຫຍດຫຍັງ ແລະ ມັນຈະພຽງແຕ່ນຳບັນຫາມາສູ່ພຣະເຈົ້າ, ສະນັ້ນ ເຮົາຈຶ່ງກັບຄືນມາສູ່ພຣະທຳເຫຼົ່ານີ້, ເຮົາໄດ້ຕັ້ງໃຈຂອງເຮົາທີ່ຈະປະຕິບັດຄວາມປະສົງຂອງພຣະອົງ ນັ້ນກໍຄື ການຮັກພຣະເຈົ້າ. ນີ້ແມ່ນເສັ້ນທາງທີ່ເຮົາກຳລັງຍ່າງ, ມັນຄືເສັ້ນທາງທີ່ເຮົາ ຜູ້ທີ່ເປັນໜຶ່ງໃນການເນລະມິດສ້າງຂອງພຣະອົງຄວນຍ່າງ. ມັນຄືວິທີທີ່ເຮົາຄວນໃຊ້ຊີວິດຂອງເຮົາ. ສິ່ງເຫຼົ່ານີ້ແມ່ນພຣະທຳຈາກຫົວໃຈຂອງພວກເຮົາ ແລະ ເຮົາຫວັງວ່າອ້າຍເອື້ອຍນ້ອງຂອງເຮົາຈະໄດ້ຮັບການໃຫ້ກຳລັງບາງຢ່າງຫຼັງຈາກທີ່ໄດ້ອ່ານພຣະທຳເຫຼົ່ານີ້ ເພື່ອວ່າ ຫົວໃຈຂອງເຮົາຈະສາມາດຮັບເອົາສັນຕິສຸກບາງເລັກນ້ອຍ. ຍ້ອນເປົ້າໝາຍຂອງເຮົາຄືການປະຕິບັດຄວາມປະສົງຂອງພຣະເຈົ້າ ແລະ ດຳລົງຊີວິດຢູ່ດ້ວຍຄວາມໝາຍຢ່າງແຈ່ມແຈ້ງ ແລະ ສະຫງ່າງາມ. ໃນນີ້, ເຮົາຈຶ່ງຈະສາມາດຕາຍໂດຍບໍ່ເສຍໃຈ, ຕາຍດ້ວຍຫົວໃຈທີ່ເຕັມໄປດ້ວຍຄວາມພໍໃຈ ແລະ ຄວາມສະບາຍໃຈ. ເຈົ້າຢາກເຮັດສິ່ງນັ້ນບໍ? ເຈົ້າເປັນຄົນທີ່ມີຄວາມຕັ້ງໃຈແບບນັ້ນບໍ?

ການທີ່ພຣະເຈົ້າສາມາດປະຕິບັດພາລະກິດໃນຜູ້ທີ່ເອີ້ນວ່າ "ມະນຸດປ່ອຍແຫ່ງອາຊີຕາເວັນອອກ" ກໍແມ່ນລິດອຳນາດທີ່ຍິ່ງໃຫຍ່ຂອງພຣະອົງແລ້ວ. ມັນແມ່ນຄວາມຖ່ອມຕົນ ແລະ ຄວາມລີ້ລັບຂອງພຣະອົງ. ບໍ່ວ່າພຣະທຳຂອງພຣະອົງ ຫຼື ການຂ້ຽນຕີຕໍ່ພວກເຮົາຈະຮຸນແຮງກໍຕາມ, ພວກເຮົາຄວນສັນລະເສີນພຣະອົງຈາກສ່ວນເລິກຂອງຫົວໃຈຂອງພວກເຮົາສຳລັບຄວາມຖ່ອມຕົນຂອງພຣະອົງ ແລະ

ຮັກພຣະອົງຈົນເຖິງທີ່ສຸດສຳລັບສິ່ງນີ້. ຜູ້ຄົນທີ່ຖືກຜູກມັດໂດຍຊາຕານເປັນເວລາສອງສາມພັນປີແມ່ນໄດ້ສືບຕໍ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງມັນ ແລະ ບໍ່ສາມາດປະຖິ້ມສິ່ງນັ້ນ. ພວກເຂົາໄດ້ສືບຕໍ່ງົມຫາ ແລະ ດີ້ນຣົນຢ່າງຂົມຂື່ນ. ໃນອະດີດ ພວກເຂົາຈະຈູດທູບ ແລະ ກົ້ມຂາບບູຊາງຕານ ແລະ ພວກເຂົາແມ່ນຜູກມັດຢ່າງແໜ້ນກັບຄອບຄົວ ແລະ ໝົກໝຸ້ນກັບທາງໂລກ ພ້ອມທັງມົວເມົາກັບສັງຄົມ. ພວກເຂົາບໍ່ສາມາດປະຖິ້ມສິ່ງເຫຼົ່ານັ້ນໄດ້. ໃນສັງຄົມທີ່ມີການແຂ່ງຂັນກັນແບບນີ້, ຜູ້ໃດຜູ້ໜຶ່ງຈະຄົ້ນຫາຊີວິດທີ່ມີຄວາມໝາຍໄດ້ຢູ່ໃສ? ສິ່ງທີ່ຜູ້ຄົນບັນລະຍາຍໄດ້ກໍຄືຊີວິດແຫ່ງການທົນທຸກ ແລະ ໂຊກດີ ທີ່ພຣະເຈົ້າໄດ້ຊ່ວຍຜູ້ຄົນທີ່ໄຮ້ດຽງສາເຫຼົ່ານີ້ໃຫ້ລອດພົ້ນ ໂດຍວາງຊີວິດຂອງພວກເຮົາຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະອົງ, ເພື່ອວ່າຊີວິດຂອງພວກເຮົາຈະປິຕິຍິນດີ ແລະ ບໍ່ເຕັມໄປດ້ວຍຄວາມກັງວົນອີກຕໍ່ໄປ. ພວກເຮົາໄດ້ສືບຕໍ່ດຳລົງຊີວິດຢູ່ພາຍໃຕ້ຄວາມກະລຸນາຂອງພຣະອົງຈົນເຖິງປັດຈຸບັນ. ນີ້ບໍ່ແມ່ນພອນຂອງພຣະເຈົ້າບໍ? ຜູ້ໃດຜູ້ໜຶ່ງຈະສາມາດກ້າຮຽກຮ້ອງຢ່າງເກີນຂອບເຂດຈາກພຣະເຈົ້າໄດ້ແນວໃດ? ພຣະອົງໄດ້ມອບໃຫ້ແກ່ພວກເຮົາພຽງເລັກນ້ອຍບໍ? ເຈົ້າຍັງບໍ່ພໍໃຈບໍ? ເຮົາຄິດວ່າ ເວລາທີ່ພວກເຮົາຈະຕອບແທນຄວາມຮັກຂອງພຣະເຈົ້າໄດ້ມາເຖິງແລ້ວ. ພວກເຮົາອາດທົນທຸກກັບການເຍາະເຍີ້ຍ, ການກ່າວຮ້າຍ ແລະ ການຂົ່ມເຫັງບໍ່ແມ່ນໜ້ອຍ ຍ້ອນພວກເຮົາຕິດຕາມເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າ, ແຕ່ເຮົາເຊື່ອວ່າ ນີ້ຈະເປັນສິ່ງທີ່ມີຄວາມໝາຍ. ມັນເປັນສິ່ງທີ່ມີສະຫງ່າລາສີ, ບໍ່ມີຄວາມອັບອາຍ ແລະ ບໍ່ວ່າຫຍັງກໍຕາມ, ພວກເຮົາຈະໄດ້ຮັບພອນຢ່າງຫຼວງຫຼາຍ. ໃນຄວາມຜິດຫວັງຫຼາຍຄັ້ງຈົນນັບບໍ່ຖ້ວນ, ພຣະທຳຂອງພຣະເຈົ້າໄດ້ໃຫ້ຄວາມສະບາຍໃຈ ແລະ ກ່ອນທີ່ພວກເຮົາຈະຮູ້ຕົວ, ຄວາມໂສກເສົ້າກໍໄດ້ກາຍເປັນຄວາມປິຕິຍິນດີ. ໃນຄວາມຕ້ອງການຫຼາຍຄັ້ງຈົນນັບບໍ່ຖ້ວນ, ພຣະເຈົ້າໄດ້ໃຫ້ພອນ ແລະ ພວກເຮົາໄດ້ຮັບການສະໜອງຜ່ານທາງພຣະທຳຂອງພຣະອົງ. ໃນຄວາມເຈັບປ່ວຍຫຼາຍຄັ້ງຈົນນັບບໍ່ຖ້ວນ, ພຣະທຳຂອງພຣະເຈົ້າໄດ້ໃຫ້ຊີວິດ, ພວກເຮົາໄດ້ຫຼຸດພົ້ນຈາກອັນຕະລາຍ ແລະ ໄດ້ຫັນປ່ຽນຈາກອັນຕະລາຍໄປສູ່ຄວາມປອດໄພ. ເຈົ້າໄດ້ຮັບຫຼາຍສິ່ງຫຼາຍຢ່າງແລ້ວຈາກ ສິ່ງເຫຼົ່ານີ້ ໂດຍບໍ່ຮູ້ຕົວ. ເຈົ້າບໍ່ຈື່ຫຍັງກ່ຽວກັບສິ່ງນີ້ບໍ?

# ເສັ້ນທາງ... (3)

ໃນຊີວິດຂອງເຮົາ, ເຮົາຍິນດີຢູ່ສະເໝີທີ່ຈະມອບຄວາມຄິດ ແລະ ຮ່າງກາຍຂອງເຮົາທັງໝົດໃຫ້ແກ່ພຣະເຈົ້າ. ມີແຕ່ເມື່ອນັ້ນ ຄວາມສຳນຶກຂອງເຮົາຈຶ່ງຈະປາສະຈາກການຕຳນິຕິເຕືອນ ແລະ ຂ້ອນຂ້າງສະຫງົບສຸກ. ຄົນທີ່ສະແຫວງຫາຊີວິດຕ້ອງມອບຫົວໃຈທັງໝົດຂອງພວກເຂົາໃຫ້ແກ່ພຣະເຈົ້າກ່ອນ; ນີ້ຄືເງື່ອນໄຂລ່ວງໜ້າ. ເຮົາຢາກໃຫ້ອ້າຍເອື້ອຍນ້ອງຂອງເຮົາອະທິຖານຫາພຣະເຈົ້າພ້ອມກັບເຮົາ: "ໂອ ພຣະເຈົ້າ! ຂໍໃຫ້ພຣະວິນຍານຂອງພຣະອົງທີ່ຢູ່ໃນສະຫວັນປະທານຄວາມກະລຸນາໃຫ້ກັບຜູ້ຄົນເທິງແຜ່ນດິນໂລກ, ເພື່ອວ່າຫົວໃຈຂອງຂ້ານ້ອຍຈະຫັນມາຫາພຣະອົງຢ່າງສົມບູນ, ເພື່ອວ່າພຣະວິນຍານຂອງຂ້ານ້ອຍຈະຖືກດົນບັນດານໂດຍພຣະອົງ, ເພື່ອວ່າຂ້ານ້ອຍຈະໄດ້ເຫັນຄວາມເປັນຕາຮັກຂອງພຣະອົງໃນຫົວໃຈຂອງຂ້ານ້ອຍ ແລະ ໃນພຣະວິນຍານຂອງຂ້ານ້ອຍ ແລະ ເພື່ອວ່າຄົນທີ່ຢູ່ເທິງແຜ່ນດິນໂລກຈະໄດ້ຮັບພອນເພື່ອເຫັນຄວາມສວຍງາມຂອງພຣະອົງ. ພຣະເຈົ້າເອີຍ! ຂໍໃຫ້ພຣະວິນຍານຂອງພຣະອົງດົນບັນດານວິນຍານຂອງພວກຂ້ານ້ອຍອີກຄັ້ງ, ເພື່ອວ່າຄວາມຮັກຂອງພວກຂ້ານ້ອຍຈະເປັນນິດນິລັນ ແລະ ບໍ່ມີວັນປ່ຽນແປງ!" ໃນພວກເຮົາທຸກຄົນ, ພຣະເຈົ້າໄດ້ທົດສອບຫົວໃຈຂອງພວກເຮົາກ່ອນ ແລະ ຫຼັງຈາກທີ່ພວກເຮົາໄດ້ຖອກເທຫົວໃຈຂອງພວກເຮົາໃຫ້ແກ່ພຣະອົງ, ພຣະອົງຈະເລີ່ມດົນບັນດານວິນຍານຂອງພວກເຮົາ. ມັນແມ່ນຢູ່ໃນວິນຍານຂອງພວກເຮົາເທົ່ານັ້ນ ພວກເຮົາຈຶ່ງຈະສາມາດເບິ່ງເຫັນຄວາມເປັນຕາຮັກ, ອຳນາດສູງສຸດ ແລະ ຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ນີ້ຄືເສັ້ນທາງຂອງພຣະວິນຍານບໍລິສຸດທີ່ຢູ່ໃນມະນຸດ. ເຈົ້າມີຊີວິດແບບນີ້ບໍ? ເຈົ້າໄດ້ຜະເຊີນກັບຊີວິດຂອງພຣະວິນຍານບໍລິສຸດບໍ? ວິນຍານຂອງເຈົ້າຖືກດົນບັນດານໂດຍພຣະເຈົ້າບໍ? ເຈົ້າໄດ້ເຫັນເຖິງວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດໃນຜູ້ຄົນບໍ? ເຈົ້າໄດ້ມອບຫົວໃຈທັງໝົດຂອງເຈົ້າໃຫ້ແກ່ພຣະເຈົ້າບໍ? ເມື່ອເຈົ້າໄດ້ມອບຫົວໃຈທັງໝົດຂອງເຈົ້າໃຫ້ແກ່ພຣະເຈົ້າ, ເຈົ້າກໍຈະສາມາດຜະເຊີນກັບຊີວິດຂອງພຣະວິນຍານບໍລິສຸດໂດຍກົງ ແລະ ພາລະກິດຂອງພຣະອົງກໍຈະຖືກເຮັດໃຫ້ຊັດແຈ້ງແກ່ເຈົ້າຢ່າງສະໝໍ່າສະເໝີ. ໃນເວລານີ້, ເຈົ້າຈະກາຍມາເປັນຄົນທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດ. ເຈົ້າປາຖະໜາທີ່ຈະກາຍມາເປັນບຸກຄົນດັ່ງກ່າວບໍ? ເຮົາຈື່ໄດ້ວ່າ ເຮົາຖືກດົນບັນດານໂດຍພຣະວິນຍານບໍລິສຸດ ແລະ ມອບຫົວໃຈຂອງເຮົາໃຫ້ແກ່ພຣະເຈົ້າຄັ້ງທຳອິດແນວໃດເມື່ອເຮົາລົ້ມລົງຕໍ່ໜ້າພຣະອົງ ແລະ ຮ້ອງໄຫ້ອອກມາວ່າ: "ໂອ ພຣະເຈົ້າ! ພຣະອົງໄດ້ເປີດຕາຂອງຂ້ານ້ອຍ ແລະ ຍອມໃຫ້ຂ້ານ້ອຍໄດ້ຮູ້ຈັກຄວາມລອດພົ້ນຂອງພຣະອົງ. ຂ້ານ້ອຍປາຖະໜາທີ່ຈະມອບຫົວໃຈຂອງຂ້ານ້ອຍໃຫ້ແກ່ພຣະອົງທັງສິ້ນ ແລະ ຂ້ານ້ອຍພຽງແຕ່ຂໍໃຫ້ຄວາມປະສົງຂອງພຣະອົງຖືກປະຕິບັດ, ຂ້ານ້ອຍພຽງແຕ່ປາຖະໜາໃຫ້ຫົວໃຈຂອງຂ້ານ້ອຍໄດ້ຮັບຄວາມເຫັນດີເຫັນພ້ອມຂອງພຣະອົງໃນການສະຖິດຂອງພຣະອົງ ແລະ ຂ້ານ້ອຍພຽງແຕ່ຂໍປະຕິບັດຕາມຄວາມປະສົງຂອງພຣະອົງ". ເຮົາຈະບໍ່ລືມຄຳອະທິຖານນັ້ນຈັກເທື່ອ; ເຮົາຖືກດົນບັນດານຢ່າງເລິກເຊິ່ງ ແລະ ເຮົາຮ້ອງໄຫ້ອອກມາດ້ວຍຄວາມທຸກທໍລະມານໃຈຕໍ່ໜ້າພຣະເຈົ້າ. ນັ້ນແມ່ນຄຳອະທິຖານທີ່ສຳເລັດເປັນຄັ້ງອຳທິດຂອງເຮົາ ໃນການສະຖິດຂອງພຣະເຈົ້າ

ດັ່ງຄົນໆໜຶ່ງທີ່ຖືກຊ່ວຍໃຫ້ລອດພົ້ນ ແລະ ມັນເປັນຄວາມປາຖະໜາຢ່າງທໍາອິດໃນຫົວໃຈຂອງເຮົາ. ຫຼັງຈາກນັ້ນ, ເຮົາກໍຖືກດົນບັນດານໂດຍພຣະວິນຍານບໍລິສຸດຢູ່ເລື້ອຍໆ. ເຈົ້າມີປະສົບການແບບນີ້ບໍ? ພຣະວິນຍານບໍລິສຸດປະຕິບັດພາລະກິດໃນຕົວເຈົ້າບໍ? ເຮົາຄິດວ່າ ຈະໃນລະດັບຫຼາຍກວ່າ ຫຼື ໜ້ອຍກວ່າກໍຕາມ, ປະສົບການນີ້ແມ່ນຖືກແບ່ງປັນໂດຍທຸກຄົນທີ່ສະແຫວງຫາເພື່ອຮັກພຣະເຈົ້າ, ມັນເປັນພຽງແຕ່ວ່າພວກເຂົາໄດ້ລືມແລ້ວ. ຖ້າຜູ້ໃດຜູ້ໜຶ່ງເວົ້າວ່າ ພວກເຂົາບໍ່ມີປະສົບການດັ່ງກ່າວ, ສິ່ງນີ້ກໍພິສູດວ່າ ພວກເຂົາຍັງບໍ່ໄດ້ຖືກຊ່ວຍໃຫ້ລອດພົ້ນເທື່ອ ແລະ ພວກເຂົາຍັງຄົງຢູ່ພາຍໃຕ້ອິດທິພົນຂອງຊາຕານ. ພາລະກິດຂອງພຣະວິນຍານບໍລິສຸດທີ່ທໍາມະດາຕໍ່ພວກເຮົາທຸກຄົນແມ່ນເສັ້ນທາງຂອງພຣະວິນຍານບໍລິສຸດ ແລະ ມັນຍັງເປັນເສັ້ນທາງຂອງຄົນທີ່ເຊື່ອ ແລະ ສະແຫວງຫາພຣະເຈົ້າ. ບາດກ້າວທໍາອິດຂອງພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນຜູ້ຄົນກໍຄືການດົນບັນດານວິນຍານຂອງພວກເຂົາ, ຫຼັງຈາກນັ້ນ ພວກເຂົາກໍຈະເລີ່ມຮັກພຣະເຈົ້າ ແລະ ສະແຫວງຫາຊີວິດ ແລະ ທຸກຄົນທີ່ຍ່າງໃນເສັ້ນທາງນີ້ກໍຈະຢູ່ໃນກະແສຂອງພຣະວິນຍານບໍລິສຸດ. ສິ່ງເຫຼົ່ານີ້ບໍ່ແມ່ນແຕ່ພະລັງຂອງພາລະກິດຂອງພຣະເຈົ້າທີ່ຢູ່ໃນປະເທດຈີນແຜ່ນດິນໃຫຍ່, ແຕ່ທົ່ວຈັກກະວານ. ພຣະອົງປະຕິບັດພາລະກິດດັ່ງກ່າວໃນທຸກຄົນ. ຖ້າຜູ້ໃດຜູ້ໜຶ່ງບໍ່ເຄີຍຖືກດົນບັນດານຈັກເທື່ອ, ສິ່ງນີ້ກໍພິສູດວ່າພວກເຂົາຢູ່ນອກກະແສແຫ່ງການຟື້ນຟູ. ໃນຫົວໃຈຂອງເຮົາ, ເຮົາອະທິຖານຫາພຣະເຈົ້າໂດຍບໍ່ຢຸດເຊົາ, ຂໍໃຫ້ພຣະອົງດົນບັນດານທຸກຄົນ, ເພື່ອວ່າທຸກຄົນທີ່ຢູ່ພາຍໃຕ້ດວງຕາເວັນອາດຖືກດົນບັນດານໂດຍພຣະອົງ ແລະ ຍ່າງໃນເສັ້ນທາງນີ້. ນີ້ອາດເປັນພຽງການຮຽກຮ້ອງທີ່ບໍ່ມີຄວາມໝາຍຈາກເຮົາຫາພຣະເຈົ້າ, ແຕ່ເຮົາເຊື່ອວ່າ ພຣະອົງຈະເຮັດສິ່ງນີ້. ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາທຸກຄົນຈະອະທິຖານເພື່ອສິ່ງນີ້, ເພື່ອຄວາມປະສົງຂອງພຣະເຈົ້າຈະຖືກປະຕິບັດ ແລະ ເພື່ອພາລະກິດຂອງພຣະອົງຈະສໍາເລັດໃນໄວໆນີ້, ເພື່ອວ່າພຣະວິນຍານຂອງພຣະອົງທີ່ຢູ່ໃນສະຫວັນຈະໄດ້ພັກຜ່ອນ. ນີ້ຄືຄວາມຫວັງເລັກໆນ້ອຍໆຂອງເຮົາເອງ.

ເຮົາເຊື່ອວ່າ ໃນເມື່ອພຣະເຈົ້າສາມາດເລີ່ມຕົ້ນພາລະກິດຂອງພຣະອົງໃນປ້ອມປາການໜຶ່ງຂອງຜີຮ້າຍ, ພຣະອົງກໍຈະສາມາດເຮັດແບບດຽວກັນຕໍ່ຄົນອື່ນອີກນັບບໍ່ຖ້ວນທົ່ວຈັກກະວານຢ່າງແນ່ນອນ. ພວກເຮົາທີ່ຢູ່ໃນຍຸກສຸດທ້າຍແມ່ນຈະໄດ້ເຫັນມື້ແຫ່ງສະຫງ່າລາສີຂອງພຣະເຈົ້າຢ່າງແນ່ນອນ, ດັ່ງທີ່ໄດ້ກ່າວໄວ້ວ່າ "ຄົນທີ່ຕິດຕາມຈົນເຖິງທີ່ສຸດກໍຈະຖືກຊ່ວຍໃຫ້ລອດພົ້ນ". ບໍ່ມີຜູ້ໃດສາມາດແທນທີ່ພຣະເຈົ້າໃນຂັ້ນຕອນນີ້ຂອງພາລະກິດຂອງພຣະອົງໄດ້, ມີພຽງແຕ່ພຣະເຈົ້າເອງເທົ່ານັ້ນທີ່ສາມາດປະຕິບັດພາລະກິດນີ້ໄດ້, ຍ້ອນຂັ້ນຕອນນີ້ຂອງພາລະກິດແມ່ນພິເສດ, ມັນເປັນຂັ້ນຕອນຂອງພາລະກິດແຫ່ງການເອົາຊະນະ ແລະ ຜູ້ຄົນບໍ່ສາມາດເອົາຊະນະຄົນອື່ນໄດ້. ຜູ້ຄົນພຽງແຕ່ຖືກເອົາຊະນະໄດ້ເມື່ອພຣະເຈົ້າກ່າວດ້ວຍປາກຂອງພຣະອົງເອງ ແລະ ກະທໍາດ້ວຍມືຂອງພຣະອົງເອງ. ໃນຈັກກະວານທັງປວງ, ພຣະເຈົ້າໃຊ້ປະເທດມັງກອນແດງທີ່ຍິ່ງໃຫຍ່ເພື່ອເປັນສະໜາມທົດສອບ, ຫຼັງຈາກນັ້ນ ພຣະອົງຈະເລີ່ມຕົ້ນພາລະກິດນີ້ທົ່ວຈັກກະວານ. ແລ້ວພຣະອົງກໍຈະປະຕິບັດພາລະກິດທີ່ຍິ່ງໃຫຍ່ກວ່າເກົ່າທົ່ວຈັກກະວານ ແລະ ທຸກຄົນໃນຈັກກະວານຈະໄດ້ຮັບພາລະກິດແຫ່ງການເອົາຊະນະຂອງພຣະອົງ. ຄົນທຸກສາສະໜາ ແລະ ທຸກນິກາຍຈະຕ້ອງຍອມຮັບຂັ້ນຕອນນີ້ຂອງພາລະກິດ. ນີ້ຄືເສັ້ນທາງທີ່ຕ້ອງຍ່າງ,

ບໍ່ມີຜູ້ໃດສາມາດຫຼີບໜີມັນໄດ້. ເຈົ້າເຕັມໃຈທີ່ຈະຍອມຮັບເອົາສິ່ງນີ້ທີ່ພຣະເຈົ້າໄດ້ຝາກຝັງໄວ້ກັບເຈົ້າບໍ? ເຮົາຮູ້ສຶກຢູ່ສະເໝີວ່າ ການຍອມຮັບເອົາການຝາກຝັງຂອງພຣະວິນຍານບໍລິສຸດຄືສິ່ງທີ່ມີສະຫງ່າລາສີ. ເຮົາຄິດວ່າ, ນີ້ຄືການຝາກຝັງທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະເຈົ້າໄດ້ມອບໃຫ້ແກ່ມະນຸດຊາດ. ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາຈະເຮັດວຽກໜັກຄຽງຄູ່ກັບເຮົາ ແລະ ຍອມຮັບເອົາການຝາກຝັງນີ້ຈາກພຣະເຈົ້າ, ເພື່ອວ່າພຣະເຈົ້າຈະໄດ້ຮັບສະຫງ່າລາສີທົ່ວຈັກກະວານ ແລະ ໃນອານາຈັກເບື້ອງເທິງ ແລະ ຊີວິດຂອງພວກເຮົາຈະບໍ່ສູນເປົ່າ. ພວກເຮົາຄວນເຮັດບາງສິ່ງສຳລັບພຣະເຈົ້າ ຫຼື ພວກເຮົາຄວນໃຫ້ຄຳສາບານ. ຖ້າຜູ້ຄົນບໍ່ສະແຫວງຫາເປົ້າໝາຍໃດເລີຍ ເມື່ອພວກເຂົາເຊື່ອໃນພຣະເຈົ້າ, ແລ້ວຊີວິດຂອງພວກເຂົາກໍຈະສູນເປົ່າ ແລະ ເມື່ອເຖິງເວລາທີ່ພວກເຂົາຈະຕ້ອງຕາຍ, ພວກເຂົາກໍຈະເຫັນພຽງທ້ອງຟ້າສີຟ້າ ແລະ ໂລກແຫ່ງຂີ້ຝຸ່ນເທົ່ານັ້ນ. ນັ້ນແມ່ນຊີວິດທີ່ມີຄວາມໝາຍບໍ? ຖ້າເຈົ້າສາມາດບັນລຸເງື່ອນໄຂຂອງພຣະເຈົ້າໃນຂະນະທີ່ເຈົ້າມີຊີວິດຢູ່, ນີ້ບໍ່ແມ່ນສິ່ງທີ່ສວຍງາມບໍ? ເປັນຫຍັງເຈົ້າຈຶ່ງນຳບັນຫາດັ່ງກ່າວມາໃຫ້ຕົນເອງຢູ່ສະເໝີ ແລະ ເປັນຫຍັງເຈົ້າຈຶ່ງທໍ້ຖອຍໃຈແບບນັ້ນຢູ່ສະເໝີ? ເຈົ້າໄດ້ຮັບຫຍັງຈາກພຣະເຈົ້າໂດຍການປະຕິບັດແບບນັ້ນບໍ? ແລ້ວພຣະເຈົ້າຈະໄດ້ຮັບຫຍັງຈາກເຈົ້າ? ໃນຄຳສາບານຂອງເຮົາຕໍ່ພຣະເຈົ້າ, ມີພຽງສັນຍາຂອງຫົວໃຈຂອງເຮົາ; ເຮົາບໍ່ໄດ້ພະຍາຍາມຫຼອກລວງພຣະອົງດ້ວຍຄຳເວົ້າ. ເຮົາຈະບໍ່ເຮັດສິ່ງດັ່ງກ່າວຈັກເທື່ອ, ເຮົາພຽງແຕ່ປາຖະໜາທີ່ຈະປອບໂຍນພຣະເຈົ້າທີ່ເຮົາຮັກດ້ວຍຫົວໃຈຂອງເຮົາ, ເພື່ອວ່າພຣະວິນຍານຂອງພຣະອົງທີ່ຢູ່ໃນສະຫວັນຈະໄດ້ຮັບຄວາມອົບອຸ່ນໃຈ. ຫົວໃຈອາດມີຄ່າ, ແຕ່ຄວາມຮັກລໍ້າຄ່າຍິ່ງກວ່າ. ເຮົາຈະມອບຄວາມຮັກທີ່ລໍ້າຄ່າທີ່ສຸດໃນຫົວໃຈຂອງເຮົາໃຫ້ແກ່ພຣະເຈົ້າ ເພື່ອວ່າພຣະອົງຈະໄດ້ຮັບສິ່ງທີ່ສວຍງາມທີ່ສຸດທີ່ເຮົາມີ ແລະ ເພື່ອວ່າພຣະອົງຈະໄດ້ພໍໃຈດ້ວຍຄວາມຮັກທີ່ເຮົາມອບຖວາຍໃຫ້ແກ່ພຣະອົງ. ເຈົ້າເຕັມໃຈທີ່ຈະມອບຄວາມຮັກຂອງເຈົ້າໃຫ້ແກ່ພຣະເຈົ້າເພື່ອໃຫ້ພຣະອົງໄດ້ຊື່ນຊົມບໍ? ເຈົ້າເຕັມໃຈທີ່ຈະເຮັດໃຫ້ສິ່ງນີ້ເປັນທຶນຂອງການເປັນຢູ່ຂອງເຈົ້າບໍ? ໃນປະສົບການຂອງເຮົາ, ເຮົາໄດ້ເຫັນວ່າ ຍິ່ງເຮົາມອບຄວາມຮັກໃຫ້ກັບພຣະເຈົ້າຫຼາຍສໍ່າໃດ, ເຮົາຍິ່ງຄົ້ນພົບຄວາມປິຕິຍິນດີໃນການດຳລົງຊີວິດຢູ່ຫຼາຍຂຶ້ນສໍ່ານັ້ນ; ຍິ່ງໄປກວ່ານັ້ນ ບໍ່ມີຂີດຈຳກັດໃນກຳລັງຂອງເຮົາ ແລະ ເຮົາຍິນດີມອບຖວາຍຮ່າງກາຍ ແລະ ຈິດໃຈຂອງເຮົາທັງໝົດ ແລະ ເຮົາມີຄວາມຮູ້ສຶກຢູ່ສະເໝີວ່າ ເຮົາບໍ່ສາມາດຮັກພຣະເຈົ້າໄດ້ຢ່າງພຽງພໍ. ແລ້ວຄວາມຮັກຂອງເຈົ້າແມ່ນຄວາມຮັກທີ່ເລັກນ້ອຍບໍ ຫຼື ມັນແມ່ນຄວາມຮັກຢ່າງມະຫາສານທີ່ບໍ່ສາມາດວັດແທກໄດ້? ຖ້າເຈົ້າປາຖະໜາທີ່ຈະຮັກພຣະເຈົ້າຢ່າງແທ້ຈິງ, ເຈົ້າກໍຈະມີຄວາມຮັກຫຼາຍຂຶ້ນທີ່ຈະມອບຄືນກັບພຣະອົງຢູ່ສະເໝີ ແລະ ຖ້ານັ້ນເປັນຄວາມຈິງ, ແລ້ວບຸກຄົນໃດ ຫຼື ສິ່ງໃດຈະສາມາດຂັດຂວາງຫົນທາງແຫ່ງຄວາມຮັກຂອງເຈົ້າສຳລັບພຣະເຈົ້າໄດ້ບໍ?

ພຣະເຈົ້າຖະໜຸຖະໜອມຄວາມຮັກຂອງມະນຸດທຸກຄົນ. ຕໍ່ທຸກຄົນທີ່ຮັກພຣະອົງ, ພອນຂອງພຣະອົງແມ່ນເພີ່ມຂຶ້ນເປັນສອງເທົ່າ, ຍ້ອນຄວາມຮັກຂອງມະນຸດຍາກຫຼາຍທີ່ຈະໄດ້ຮັບ ແລະ ມີພຽງເລັກນ້ອຍ ເຊິ່ງມັນເກືອບບໍ່ສາມາດຮັບຮູ້ໄດ້. ທົ່ວຈັກກະວານ, ພຣະເຈົ້າໄດ້ພະຍາຍາມຮຽກຮ້ອງໃຫ້ຜູ້ຄົນຮັກພຣະອົງຄືນ, ແຕ່ທົ່ວຍຸກຕ່າງໆຈົນເຖິງປັດຈຸບັນ, ມີພຽງໜ້ອຍດຽວ, ກໍາມືດຽວ, ທີ່ໄດ້ມອບ

ຄວາມຮັກທີ່ແທ້ຈິງຄືນໃຫ້ກັບພຣະອົງ. ເທົ່າທີ່ເຮົາຈື່ໄດ້, ເປໂຕຄືຄົນໜຶ່ງ, ແຕ່ເພິ່ນຖືກນຳພາໂດຍພຣະເຢຊູເປັນການສ່ວນຕົວ ແລະ ມັນແມ່ນໃນເວລາທີ່ເພິ່ນຕາຍເທົ່ານັ້ນ ເພິ່ນຈຶ່ງໄດ້ມອບຄວາມຮັກຢ່າງສົມບູນໃຫ້ກັບພຣະເຈົ້າ ແລະ ຫຼັງຈາກນັ້ນ ຊີວິດຂອງເພິ່ນກໍສິ້ນສຸດ. ດ້ວຍເຫດນັ້ນ ພາຍໃຕ້ສະພາບການທີ່ໂຫດຮ້າຍເຫຼົ່ານີ້, ພຣະເຈົ້າໄດ້ເຮັດໃຫ້ຂອບເຂດຂອງພາລະກິດຂອງພຣະອົງໃນຈັກກະວານແຄບລົງ ແລະ ໃຊ້ປະເທດມັງກອນແດງທີ່ຍິ່ງໃຫຍ່ເປັນເຂດສາທິດ ໂດຍສຸມກຳລັງຂອງພຣະອົງ ແລະ ຄວາມພະຍາຍາມຂອງພຣະອົງທັງໝົດໃນບ່ອນດຽວ, ເພື່ອເຮັດໃຫ້ພາລະກິດຂອງພຣະອົງມີປະສິດທິພາບຍິ່ງຂຶ້ນ ແລະ ມີຜົນປະໂຫຍດຕໍ່ຄຳພະຍານຂອງພຣະອົງຍິ່ງຂຶ້ນ. ມັນແມ່ນພາຍໃຕ້ສະພາບການສອງຢ່າງນີ້ ທີ່ພຣະເຈົ້າໄດ້ຖ່າຍທອດພາລະກິດແຫ່ງຈັກກະວານທັງປວງຂອງພຣະອົງໄປສູ່ຜູ້ຄົນເຫຼົ່ານີ້ໃນປະເທດຈີນແຜ່ນດິນໃຫຍ່, ຜູ້ທີ່ມີຄວາມສາມາດຕໍ່າທີ່ສຸດໃນບັນດາຄົນທັງປວງ ແລະ ເລີ່ມພາລະກິດຄວາມຮັກແຫ່ງການເອົາຊະນະຂອງພຣະອົງ. ແລ້ວຫຼັງຈາກທີ່ພຣະອົງໄດ້ເຮັດໃຫ້ພວກເຂົາທຸກຄົນຮັກພຣະອົງ, ພຣະອົງກໍປະຕິບັດບາດກ້າວຕໍ່ໄປຂອງພາລະກິດຂອງພຣະອົງ ເຊິ່ງນັ້ນຄືແຜນການຂອງພຣະເຈົ້າ. ສະນັ້ນ ພາລະກິດຂອງພຣະອົງຈຶ່ງບັນລຸຜົນຢ່າງໃຫຍ່ທີ່ສຸດ. ຂອບເຂດຂອງພາລະກິດຂອງພຣະອົງມີທັງແກ່ນສຳຄັນ ແລະ ຂໍ້ຈຳກັດ. ມັນຊັດເຈນແລ້ວວ່າພຣະເຈົ້າໄດ້ຈ່າຍລາຄາຫຼາຍສໍ່າໃດ ແລະ ພຣະອົງໄດ້ສະຫຼະຄວາມພະຍາຍາມຫຼາຍສໍ່າໃດ ເມື່ອປະຕິບັດພາລະກິດຂອງພຣະອົງໃນພວກເຮົາເພື່ອໃຫ້ມື້ຂອງພວກເຮົາມາເຖິງ. ນີ້ຄືພອນຂອງພວກເຮົາ. ສະນັ້ນ ສິ່ງທີ່ເຮັດໃຫ້ແນວຄິດຂອງຜູ້ຄົນສັບສົນກໍຄືການທີ່ຊາວຕາເວັນຕົກອິດສາພວກເຮົາທີ່ໄດ້ເກີດໃນສະຖານທີ່ໆດີ, ແຕ່ພວກເຮົາທຸກຄົນເຫັນວ່າຕົນເອງຕ້ອຍຕໍ່າ ແລະ ທຳມະດາສາມັນ. ນີ້ບໍ່ແມ່ນພຣະເຈົ້າຍົກພວກເຮົາຂຶ້ນບໍ? ເຊື້ອສາຍຂອງມັງກອນແດງທີ່ຍິ່ງໃຫຍ່ ຜູ້ເຊິ່ງຖືກຢຽບຢໍ່າຢູ່ສະເໝີ ແມ່ນຖືກຊື່ນຊົມໂດຍຊາວຕາເວັນຕົກ, ນີ້ຄືພອນຂອງພວກເຮົາຢ່າງແທ້ຈິງ. ເມື່ອເຮົາຄິດເຖິງສິ່ງນີ້, ເຮົາກໍຖືກເອົາຊະນະໂດຍຄວາມກະລຸນາຂອງພຣະເຈົ້າ ແລະ ໂດຍຄວາມເປັນທີ່ຮັກ ແລະ ຄວາມໃກ້ຊິດຂອງພຣະອົງແລ້ວ. ສິ່ງນີ້ສະແດງວ່າ ທຸກສິ່ງທີ່ພຣະເຈົ້າເຮັດແມ່ນບໍ່ສາມາດເຂົ້າກັນໄດ້ກັບແນວຄິດຂອງມະນຸດ. ເຖິງແມ່ນວ່າ ທຸກຄົນເຫຼົ່ານີ້ຈະຖືກສາບແຊ່ງ, ພຣະອົງກໍບໍ່ໄດ້ຈຳກັດດ້ວຍຄວາມເຄັ່ງຄັດຂອງກົດໝາຍ ແລະ ພຣະອົງມີເຈດຕະນາທີ່ຈະຖ່າຍທອດຈຸດສູນລວມຂອງພາລະກິດຂອງພຣະອົງໄປສູ່ໂລກແຫ່ງນີ້. ນີ້ຄືເຫດຜົນທີ່ເຮົາຊື່ນຊົມຍິນດີ, ທີ່ເຮົາຮູ້ສຶກມີຄວາມສຸກເຫຼືອເກີນ. ໃນຖານະເປັນຜູ້ທີ່ໄດ້ຮັບບົດບາດນຳໃນພາລະກິດ, ຄືກັບຫົວໜ້າປະໂລຫິດທ່າມກາງຊາວອິດສະຣາເອນ, ເຮົາສາມາດປະຕິບັດພາລະກິດຂອງພຣະວິນຍານໂດຍກົງ ແລະ ຮັບໃຊ້ພຣະວິນຍານຂອງພຣະເຈົ້າໂດຍກົງ; ນີ້ຄືພອນຂອງເຮົາ. ຜູ້ໃດຈະກ້າຈິນຕະນາການສິ່ງດັ່ງກ່າວນີ້? ແຕ່ໃນມື້ນີ້, ສິ່ງນີ້ໄດ້ເກີດຂຶ້ນກັບພວກເຮົາຢ່າງບໍ່ໄດ້ຕັ້ງໃຈ. ມັນຄືຄວາມປິຕິຍິນດີອັນໃຫຍ່ຫຼວງທີ່ຄູ່ຄວນກັບການສະເຫຼີມສະຫຼອງຂອງພວກເຮົາແທ້ໆ. ເຮົາຫວັງວ່າພຣະເຈົ້າຈະສືບຕໍ່ອວຍພອນພວກເຮົາ ແລະ ຍົກພວກເຮົາຂຶ້ນ, ເພື່ອວ່າພວກເຮົາທີ່ກຳລັງດຳລົງຊີວິດຢູ່ໃນກອງຂີ້ສັດນີ້ອາດຖືກໃຊ້ເປັນປະໂຫຍດອັນໃຫຍ່ຫຼວງໂດຍພຣະເຈົ້າ ແລະ ໃນທີ່ສຸດກໍຕອບແທນຄວາມຮັກຂອງພຣະອົງ.

ເສັ້ນທາງທີ່ເຮົາຍ່າງໃນຕອນນີ້ແມ່ນເສັ້ນທາງແຫ່ງການຕອບແທນຄວາມຮັກຂອງພຣະເຈົ້າ, ແຕ່ເຮົາກໍມີຄວາມຮູ້ສຶກຢູ່ສະເໝີວ່າ ນີ້ບໍ່ແມ່ນຄວາມປະສົງຂອງພຣະເຈົ້າ ຫຼື ມັນບໍ່ແມ່ນເສັ້ນທາງທີ່ເຮົາຄວນຍ່າງ. ການຖືກໃຊ້ຢ່າງໃຫຍ່ຫຼວງໂດຍພຣະເຈົ້າຄືຄວາມປະສົງຂອງພຣະເຈົ້າ ແລະ ຄືເສັ້ນທາງຂອງພຣະວິນຍານບໍລິສຸດ. ບາງເທື່ອ ເຮົາເຂົ້າໃຈຜິດ, ແຕ່ເຮົາຄິດວ່າ ນີ້ຄືເສັ້ນທາງຂອງເຮົາ, ຕັ້ງແຕ່ດົນນານມາແລ້ວ ເຮົາສາບານຕໍ່ພຣະເຈົ້າວ່າ ເຮົາປາຖະໜາທີ່ຈະໃຫ້ພຣະອົງນຳພາເຮົາ, ເພື່ອວ່າເຮົາອາດກ້າວເຂົ້າໄປໃນເສັ້ນທາງທີ່ເຮົາຄວນຍ່າງດ້ວຍຄວາມຟ້າວຟັ່ງ ແລະ ປະຕິບັດຄວາມປະສົງຂອງພຣະເຈົ້າໃຫ້ໄວເທົ່າທີ່ຈະໄວໄດ້. ບໍ່ວ່າຄົນອື່ນຈະຄິດແນວໃດ, ເຮົາເຊື່ອວ່າການປະຕິບັດຕາມຄວາມປະສົງຂອງພຣະເຈົ້າແມ່ນມີຄວາມສຳຄັນທີ່ສຸດ. ບໍ່ມີຫຍັງທີ່ສຳຄັນກວ່ານີ້ໃນຊີວິດຂອງເຮົາ ແລະ ບໍ່ມີຜູ້ໃດສາມາດປະຕິເສດສິດທິນີ້ຂອງເຮົາໄດ້. ນີ້ຄືມຸມມອງສ່ວນຕົວຂອງເຮົາ ແລະ ບາງເທື່ອ ມີບາງຄົນທີ່ບໍ່ສາມາດເຂົ້າໃຈມັນໄດ້, ແຕ່ເຮົາຄິດວ່າ ເຮົາບໍ່ຈຳເປັນຕ້ອງພິສູດສິ່ງນີ້ຕໍ່ຜູ້ໃດ. ເຮົາຈະຍ່າງໃນເສັ້ນທາງທີ່ເຮົາຄວນຍ່າງ, ຫຼັງຈາກທີ່ເຮົາໄດ້ຮັບເສັ້ນທາງທີ່ເຮົາຄວນຍ່າງ ເຮົາກໍຈະເລືອກເອົາມັນ ແລະ ຈະບໍ່ຖອຍຄືນ. ສະນັ້ນ ເຮົາຈຶ່ງກັບຄືນມາຫາພຣະທຳເຫຼົ່ານີ້: ເຮົາໄດ້ຕັ້ງໃຈປະຕິບັດຄວາມປະສົງຂອງພຣະເຈົ້າ. ເຮົາແນ່ໃຈວ່າ ອ້າຍເອື້ອຍນ້ອງຂອງເຮົາຈະບໍ່ວິພາກວິຈານເຮົາ! ໂດຍລວມແລ້ວ, ຕາມຄວາມຄິດສ່ວນຕົວຂອງເຮົາ, ຄົນອື່ນສາມາດເວົ້າສິ່ງທີ່ພວກເຂົາມັກ, ແຕ່ເຮົາຮູ້ສຶກວ່າ ການປະຕິບັດຄວາມປະສົງຂອງພຣະເຈົ້າຄືສິ່ງທີ່ສຳຄັນທີ່ສຸດ ແລະ ບໍ່ມີສິ່ງໃດທີ່ຄວນຢັບຢັ້ງເຮົາໃນສິ່ງນີ້. ການປະຕິບັດຕາມຄວາມປະສົງຂອງພຣະເຈົ້າແມ່ນບໍ່ຜິດຈັກເທື່ອ! ແລ້ວມັນບໍ່ແມ່ນການປະຕິບັດເພື່ອຜົນປະໂຫຍດຂອງຜູ້ໃດຜູ້ໜຶ່ງເອງ! ເຮົາເຊື່ອວ່າພຣະເຈົ້າໄດ້ເບິ່ງຢູ່ຂ້າງໃນຫົວໃຈຂອງເຮົາ! ແລ້ວເຈົ້າຄວນເຂົ້າໃຈແນວໃດກ່ຽວກັບສິ່ງນີ້? ເຈົ້າເຕັມໃຈທີ່ຈະມອບຖວາຍຕົນເອງໃຫ້ແກ່ພຣະເຈົ້າບໍ? ເຈົ້າເຕັມໃຈທີ່ຈະຖືກພຣະເຈົ້າໃຊ້ບໍ? ເຈົ້າສາບານທີ່ຈະປະຕິບັດຕາມຄວາມປະສົງຂອງພຣະເຈົ້າບໍ? ເຮົາຫວັງວ່າ ພຣະທຳຂອງເຮົາສາມາດຊ່ວຍເຫຼືອອ້າຍເອື້ອຍນ້ອງຂອງເຮົາໄດ້ໃນບາງຢ່າງ. ເຖິງແມ່ນບໍ່ມີຫຍັງທີ່ເລິກເຊິ່ງກ່ຽວກັບຄວາມເຂົ້າໃຈຂອງເຮົາ, ເຮົາກໍຍັງບອກເຈົ້າກ່ຽວກັບສິ່ງເຫຼົ່ານັ້ນ, ເພື່ອວ່າພວກເຮົາອາດແບ່ງປັນຄວາມຮູ້ສຶກທີ່ຢູ່ຂ້າງໃນຂອງພວກເຮົາ ໂດຍປາສະຈາກສິ່ງກີດກັ້ນໃດໆລະຫວ່າງພວກເຮົາ ແລະ ເພື່ອວ່າພຣະເຈົ້າຈະຢູ່ທ່າມກາງພວກເຮົາຕະຫຼອດໄປ. ສິ່ງເຫຼົ່ານີ້ແມ່ນພຣະທຳຈາກຫົວໃຈຂອງເຮົາ. ແມ່ນແລ້ວ! ນີ້ຄືທັງໝົດທີ່ເຮົາຕ້ອງການເວົ້າອອກຈາກຫົວໃຈຂອງເຮົາໃນມື້ນີ້. ເຮົາຫວັງວ່າອ້າຍເອື້ອຍນ້ອງຂອງເຮົາຈະສືບຕໍ່ເຮັດວຽກຢ່າງໜັກ ແລະ ເຮົາຫວັງວ່າພຣະວິນຍານຂອງພຣະເຈົ້າຈະເຝົ້າເບິ່ງພວກເຮົາຢູ່ສະເໝີ!

# ເສັ້ນທາງ... (4)

ການທີ່ຜູ້ຄົນສາມາດຄົ້ນພົບຄວາມເປັນຕາຮັກຂອງພຣະເຈົ້າ, ສະແຫວງຫາຫົນທາງແຫ່ງການຮັກພຣະເຈົ້າໃນຍຸກປັດຈຸບັນ ແລະ ການທີ່ພວກເຂົາເຕັມໃຈທີ່ຈະຍອມຮັບການຝຶກຝົນຂອງອານາຈັກໃນປັດຈຸບັນ, ທຸກສິ່ງນີ້ຄືຄວາມກະລຸນາຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ມັນຄືການທີ່ພຣະອົງຍົກລະດັບຂອງມະນຸດຊາດ. ເມື່ອໃດກໍຕາມທີ່ເຮົາຄິດເຖິງສິ່ງນີ້, ເຮົາກໍມີຄວາມຮູ້ສຶກຢ່າງແຮງເຖິງຄວາມເປັນຕາຮັກຂອງພຣະເຈົ້າ. ພຣະເຈົ້າຮັກພວກເຮົາຢ່າງແທ້ຈິງ; ຖ້າພຣະອົງບໍ່ໄດ້ຮັກ, ຜູ້ໃດຈະສາມາດຄົ້ນພົບຄວາມເປັນຕາຮັກຂອງພຣະອົງ? ມີພຽງດ້ວຍເຫດນັ້ນ ເຮົາຈຶ່ງໄດ້ເຫັນວ່າ ພາລະກິດທັງໝົດນີ້ຖືກປະຕິບັດໂດຍພຣະເຈົ້າເອງ ແລະ ຜູ້ຄົນຖືກນຳພາ ແລະ ຖືກຊີ້ນຳໂດຍພຣະເຈົ້າ. ເຮົາຂອບຄຸນພຣະເຈົ້າສຳລັບສິ່ງນີ້ ແລະ ເຮົາຕ້ອງການໃຫ້ອ້າຍເອື້ອຍນ້ອງຂອງເຮົາຮ່ວມກັບເຮົາໃນການສັນລະເສີນພຣະເຈົ້າ ວ່າ: “ສະຫງ່າລາສີທັງໝົດຈົ່ງມີແກ່ພຣະອົງ, ພຣະເຈົ້າອົງສູງສຸດ! ຂໍໃຫ້ສະຫງ່າລາສີຂອງພຣະອົງເພີ່ມພູນ ແລະ ຖືກເປີດເຜີຍໃນພວກຂ້ານ້ອຍເຫຼົ່ານັ້ນທີ່ຖືກເລືອກ ແລະ ຖືກຮັບເອົາໂດຍພຣະອົງ”. ພຣະເຈົ້າໃຫ້ແສງສະຫວ່າງແກ່ເຮົາວ່າ: ພຣະອົງໄດ້ສະແດງໃຫ້ເຮົາເຫັນວ່າ ພວກເຮົາໄດ້ຖືກກຳນົດໄວ້ລ່ວງໜ້າເປັນເວລາຫຼາຍຍຸກກ່ອນແລ້ວ ແລະ ພຣະອົງປາຖະໜາທີ່ຈະຮັບເອົາພວກເຮົາໃນຍຸກສຸດທ້າຍ, ແລ້ວກໍເຮັດໃຫ້ຈັກກະວານ ແລະ ສິ່ງທັງປວງໄດ້ເຫັນສະຫງ່າລາສີທັງໝົດຂອງພຣະເຈົ້າຜ່ານທາງພວກເຮົາ. ແລ້ວພວກເຮົາກໍເປັນຜະລຶກແຫ່ງເວລາຫົກພັນປີຂອງແຜນການຄຸ້ມຄອງຂອງພຣະເຈົ້າ; ພວກເຮົາເປັນແບບຢ່າງ ແລະ ຕົວຢ່າງຂອງພາລະກິດຂອງພຣະເຈົ້າໃນຈັກກະວານທັງປວງ. ມີພຽງຕອນນີ້ເທົ່ານັ້ນ ເຮົາຈຶ່ງຮູ້ວ່າພຣະເຈົ້າຮັກພວກເຮົາຫຼາຍສໍ່າໃດແທ້ ແລະ ພາລະກິດທີ່ພຣະອົງປະຕິບັດໃນພວກເຮົາ ແລະ ສິ່ງຕ່າງໆທີ່ພຣະອົງກ່າວກໍມີຫຼາຍກວ່າໃນຍຸກທີ່ຜ່ານມາລ້ານເທົ່າ. ບໍ່ມີແມ່ນແຕ່ໃນອິດສະຣາເອນ ຫຼື ໃນເປໂຕທີ່ພຣະເຈົ້າໄດ້ປະຕິບັດພາລະກິດຫຼາຍແບບນີ້ ຫຼື ກ່າວພຣະທຳຫຼາຍເຊັ່ນນີ້, ເຊິ່ງສະແດງວ່າ ພວກເຮົາ ເຊິ່ງເປັນຄົນກຸ່ມນີ້ ໄດ້ຮັບພອນຢ່າງເຫຼືອເຊື່ອ, ໄດ້ຮັບພອນຫຼາຍກວ່າໄພ່ພົນໃນຍຸກທີ່ຜ່ານມາໂດຍຫາສິ່ງໃດປຽບປານໄດ້. ນີ້ຄືເຫດຜົນທີ່ພຣະເຈົ້າກ່າວຢູ່ສະເໝີວ່າ ຜູ້ຄົນໃນຍຸກສຸດທ້າຍແມ່ນຖືກອວຍພອນ. ບໍ່ວ່າຄົນອື່ນຈະເວົ້າຫຍັງກໍຕາມ, ເຮົາເຊື່ອວ່າພວກເຮົາຖືກອວຍພອນໂດຍພຣະເຈົ້າຫຼາຍທີ່ສຸດ. ພວກເຮົາຄວນຮັບເອົາພອນຕ່າງໆທີ່ພຣະເຈົ້າໄດ້ປະທານໃຫ້ແກ່ພວກເຮົາ; ອາດມີບາງຄົນທີ່ຈົ່ມຕໍ່ພຣະເຈົ້າ, ແຕ່ເຮົາເຊື່ອວ່າ ຖ້າພອນເຫຼົ່ານີ້ມາຈາກພຣະເຈົ້າ, ແລ້ວສິ່ງນີ້ກໍພິສູດແລ້ວວ່າ ພວກເຮົາສົມຄວນໄດ້ຮັບພວກມັນ. ເຖິງແມ່ນຄົນອື່ນຈະຕໍ່ວ່າ ຫຼື ບໍ່ດີໃຈກັບພວກເຮົາ, ເຮົາກໍຍັງເຊື່ອວ່າ ບໍ່ມີຜູ້ໃດອີກແລ້ວທີ່ສາມາດສືບທອດ ຫຼື ເອົາພອນທີ່ພຣະເຈົ້າໄດ້ມອບໃຫ້ແກ່ພວກເຮົານັ້ນໄປຈາກພວກເຮົາ. ຍ້ອນພາລະກິດຂອງພຣະເຈົ້າຖືກປະຕິບັດໃນພວກເຮົາ ແລະ ພຣະອົງກ່າວຕໍ່ພວກເຮົາເຊິ່ງໜ້າ, ກ່າວຕໍ່ພວກເຮົາ ແລະ ບໍ່ແມ່ນຄົນອື່ນ, ພຣະເຈົ້າເຮັດຕາມທີ່ພຣະອົງປາຖະໜາຈະເຮັດ. ແລ້ວຖ້າຜູ້ຄົນບໍ່ເຊື່ອໝັ້ນ, ພວກເຂົາຈະບໍ່ພຽງສ້າງບັນຫາໃຫ້ກັບພວກເຂົາເອງບໍ? ພວກເຂົາຈະບໍ່ນຳການດູຖູກມາສູ່ພວກເຂົາເອງໂດຍການເຮັດແບບນັ້ນບໍ? ເປັນຫຍັງເຮົາຈຶ່ງເວົ້າສິ່ງດັ່ງກ່າວ? ຍ້ອນເຮົາ

ເຫັນຄຸນຄ່າໃນສິ່ງນີ້ຢ່າງເລິກເຊິ່ງ. ຍົກຕົວຢ່າງເຊັ່ນ ພາລະກິດທີ່ພຣະເຈົ້າປະຕິບັດໃນຕົວເຮົາ: ມີພຽງແຕ່ເຮົາທີ່ສາມາດດຳເນີນພາລະກິດນີ້ໄດ້, ຄົນອື່ນສາມາດເຮັດໄດ້ບໍ? ເຮົາໂຊກດີພໍທີ່ໄດ້ຮັບການຝາກຝັງນີ້ຈາກພຣະເຈົ້າ, ຄົນອື່ນສາມາດເຮັດສິ່ງນີ້ຕາມອຳເພີໃຈໄດ້ບໍ? ເຖິງຢ່າງໃດກໍຕາມ, ມັນຄືຄວາມຫວັງຂອງເຮົາທີ່ອ້າຍເອື້ອຍນ້ອງຂອງເຮົາຈະເຂົ້າໃຈເຖິງຫົວໃຈຂອງເຮົາ. ເຮົາບໍ່ໄດ້ອວດໂອ້ເຖິງຄຸນສົມບັດຂອງເຮົາ, ແຕ່ກຳລັງອະທິບາຍເຖິງບັນຫາ. ເຮົາຂໍໃຫ້ສະຫງ່າລາສີທັງໝົດເປັນຂອງພຣະເຈົ້າ ແລະ ຂໍໃຫ້ພຣະເຈົ້າເຝົ້າເບິ່ງຫົວໃຈຂອງພວກເຮົາແຕ່ລະຄົນ, ເພື່ອວ່າຫົວໃຈຂອງພວກເຮົາຈະຖືກເຮັດໃຫ້ສະອາດຕໍ່ໜ້າພຣະອົງ. ໃນຫົວໃຈຂອງເຮົາ, ເຮົາປາຖະໜາທີ່ຈະຖືກຮັບເອົາໂດຍພຣະເຈົ້າຢ່າງສົມບູນ, ເພື່ອກາຍມາເປັນຜູ້ບໍລິສຸດທີ່ຖືກຖວາຍເທິງແທ່ນບູຊາ ແລະ ຍິ່ງໄປກວ່ານັ້ນ ແມ່ນເພື່ອໃຫ້ມີຄວາມເຊື່ອຟັງຂອງລູກແກະ, ປາກົດທ່າມກາງມະນຸດຊາດທັງປວງດັ່ງຮ່າງກາຍຂອງວິນຍານທີ່ບໍລິສຸດ. ນີ້ຄືສັນຍາຂອງເຮົາ, ຄຳສາບານທີ່ເຮົາໄດ້ກຳນົດໄວ້ຕໍ່ໜ້າພຣະເຈົ້າ. ເຮົາປາຖະໜາທີ່ຈະບັນລຸສິ່ງນັ້ນ ແລະຕອບແທນຄວາມຮັກຂອງພຣະເຈົ້າຜ່ານສິ່ງນີ້. ເຈົ້າເຕັມໃຈທີ່ຈະເຮັດສິ່ງນີ້ບໍ? ເຮົາເຊື່ອວ່າ ຄຳສັນຍານີ້ຂອງເຮົາຈະເຮັດໃຫ້ອ້າຍເອື້ອຍນ້ອງຊາວໜຸ່ມໄດ້ມີຊີວິດຊີວາຫຼາຍຂຶ້ນ ແລະ ມັນຈະນຳຄວາມຫວັງມາສູ່ຄົນໜຸ່ມໄດ້ຫຼາຍຂຶ້ນ. ສຳລັບເຮົາແລ້ວ ມັນເບິ່ງຄືກັບວ່າພຣະເຈົ້າເບິ່ງຄົນໜຸ່ມເປັນຄົນທີ່ສຳຄັນເປັນພິເສດ. ບາງເທື່ອ ມັນແມ່ນອະຄະຕິຂອງເຮົາເອງ, ແຕ່ເຮົາກໍຮູ້ສຶກຢູ່ສະເໝີວ່າຄົນໜຸ່ມມີໂອກາດ ແລະ ຄວາມຫວັງ; ມັນເບິ່ງຄືກັບວ່າພຣະເຈົ້າປະຕິບັດພາລະກິດພິເສດໃນຄົນໜຸ່ມ. ພວກເຂົາອາດຂາດຄວາມເຂົ້າໃຈ ແລະ ສະຕິປັນຍາ ແລະ ພວກເຂົາອາດມຸ່ງໝັ້ນ ແລະ ລ່າເລີງຄືກັບລູກງົວເກີດໃໝ່, ແຕ່ເຮົາກໍເຊື່ອວ່າ ພວກເຂົາບໍ່ໄດ້ປາສະຈາກຄຸນຄວາມດີຂອງພວກເຂົາ. ເຈົ້າສາມາດເຫັນໄດ້ເຖິງຄວາມໄຮ້ດຽງສາຂອງໄວໜຸ່ມຢູ່ໃນພວກເຂົາ ແລະ ພວກເຂົາກໍໄວໃນການຍອມຮັບເອົາສິ່ງໃໝ່ໆ. ເຖິງແມ່ນຄົນໜຸ່ມມັກເອນອ່ຽງໄປທາງຄວາມອວດດີ, ຄວາມດຸເດືອດ ແລະ ຄວາມໃຈຮ້ອນ, ສິ່ງນີ້ກໍບໍ່ໄດ້ກະທົບຄວາມສາມາດຂອງພວກເຂົາໃນການຮັບເອົາແສງສະຫວ່າງໃໝ່, ຍ້ອນຄົນໜຸ່ມແມ່ນຫາຍາກທີ່ຈະຍຶດຕິດກັບສິ່ງເດີມໆ ແລະ ຫຼ້າສະໄໝ. ນັ້ນຄືເຫດຜົນທີ່ເຮົາເຫັນເຖິງສັນຍາທີ່ບໍ່ມີຂອບເຂດໃນຄົນໜຸ່ມ ແລະ ພາລະກຳລັງຂອງພວກເຂົາ; ມັນແມ່ນຍ້ອນເຫດຜົນນີ້ ເຮົາຈຶ່ງມີຄວາມຮູ້ສຶກທີ່ອ່ອນໂຍນສຳລັບພວກເຂົາ. ເຮົາບໍ່ໄດ້ວ່າບໍ່ມັກອ້າຍເອື້ອຍນ້ອງຜູ້ອາວຸໂສ, ແຕ່ພວກເຂົາບໍ່ໄດ້ມີຄວາມສົນໃຈໃນເຮົາ ຍ້ອນເຫດນັ້ນ ເຮົາຈຶ່ງຂໍໂທດພວກເຂົາຢ່າງຈິງໃຈ. ບາງເທື່ອ ສິ່ງທີ່ເຮົາເວົ້າແມ່ນອອກນອກຂອບເຂດ ຫຼື ບໍ່ເກງໃຈຜູ້ອື່ນ, ແຕ່ເຮົາຫວັງວ່າ ພວກເຈົ້າທຸກຄົນຈະສາມາດໃຫ້ອະໄພຄວາມບໍ່ຮອບຄອບຂອງເຮົາ, ຍ້ອນເຮົາກໍໜຸ່ມເກີນໄປທີ່ຈະໃສ່ໃຈກັບວິທີທີ່ເຮົາກ່າວ. ແຕ່ຖ້າຈະເວົ້າຄວາມຈິງແລ້ວ, ອ້າຍເອື້ອຍນ້ອງຜູ້ອາວຸໂສກໍໄດ້ເຮັດໜ້າທີ່ຂອງພວກເຂົາ, ພວກເຂົາບໍ່ແມ່ນວ່າບໍ່ມີປະໂຫຍດຫຍັງເລີຍ. ນີ້ກໍຍ້ອນວ່າ ພວກເຂົາມີປະສົບການໃນການຈັດການກັບສິ່ງຕ່າງໆ; ພວກເຂົາໝັ້ນຄົງໃນວິທີທີ່ພວກເຂົາຈັດການກັບສິ່ງຕ່າງໆ ແລະ ພວກເຂົາບໍ່ສ້າງຄວາມຜິດພາດຫຍັງຫຼາຍ. ສິ່ງເຫຼົ່ານີ້ບໍ່ແມ່ນຈຸດແຂງຂອງພວກເຂົາບໍ? ໃຫ້ພວກເຮົາທຸກຄົນກ່າວຕໍ່ໜ້າພຣະເຈົ້າວ່າ: "ໂອ ພຣະເຈົ້າ! ຂໍໃຫ້ພວກຂ້ານ້ອຍທຸກຄົນປະຕິບັດຕາມໜ້າທີ່ຂອງພວກຂ້ານ້ອຍເອງໃນຕຳແໜ່ງທີ່ແຕກຕ່າງກັນຂອງ

ພວກຂ້ານ້ອຍ ແລະ ຂໍໃຫ້ພວກຂ້ານ້ອຍທຸກຄົນເຮັດສຸດຄວາມສາມາດຂອງພວກຂ້ານ້ອຍເພື່ອຄວາມປະສົງຂອງພຣະອົງ!" ເຮົາເຊື່ອວ່າ ສິ່ງນີ້ຕ້ອງເປັນຄວາມປະສົງຂອງພຣະເຈົ້າ!

ໃນປະສົບການຂອງເຮົາ, ສ່ວນໃຫຍ່ຄົນທີ່ຕໍ່ຕ້ານກະແສນີ້ຢ່າງເປີດເຜີຍ ແລະ ຜູ້ທີ່ຕໍ່ຕ້ານພຣະວິນຍານຂອງພຣະເຈົ້າໂດຍກົງ ແມ່ນຄົນອາວຸໂສ. ຄົນເຫຼົ່ານີ້ມີແນວຄິດດ້ານສາສະໜາທີ່ເຂັ້ມແຂງຫຼາຍ; ພວກເຂົາປຽບທຽບພຣະທຳຂອງພຣະເຈົ້າກັບສິ່ງທີ່ຫຼ້າສະໄໝ ແລະ ພະຍາຍາມເຮັດໃຫ້ສິ່ງທີ່ຖືກຍອມຮັບໃນອະດີດສອດຄ່ອງກັບພຣະທຳຂອງພຣະເຈົ້າຕະຫຼອດເວລາ. ພວກເຂົາບໍ່ໄດ້ເປັນຄົນບໍ່ສົມເຫດສົມຜົນບໍ? ຜູ້ຄົນດັ່ງກ່າວຈະສາມາດປະຕິບັດພາລະກິດທີ່ພຣະເຈົ້າຝາກຝັງໃຫ້ພວກເຂົາໄດ້ບໍ? ພຣະເຈົ້າຈະໃຊ້ຜູ້ຄົນດັ່ງກ່າວໃນພາລະກິດຂອງພຣະອົງໄດ້ບໍ? ພຣະວິນຍານບໍລິສຸດມີວິທີການໃນແຕ່ລະມື້ທີ່ຖືກກຳນົດໄວ້ໃນພາລະກິດຂອງພຣະອົງ; ຖ້າຜູ້ຄົນຍຶດຕິດກັບສິ່ງທີ່ຫຼ້າສະໄໝ, ມັນກໍຈະມາເຖິງມື້ທີ່ພວກເຂົາຖືກຍູ້ໃຫ້ຕົກຈາກເວທີແຫ່ງປະຫວັດສາດ. ດ້ວຍພາລະກິດແຕ່ລະຂັ້ນຕອນຂອງພຣະອົງ, ພຣະເຈົ້າຈະໃຊ້ຄົນໃໝ່. ຄົນທີ່ພະຍາຍາມສັ່ງສອນຄົນອື່ນໃນສິ່ງທີ່ຫຼ້າສະໄໝແລ້ວຈະບໍ່ນຳຄວາມພິນາດມາສູ່ຜູ້ຄົນບໍ? ແລ້ວພວກເຂົາຈະບໍ່ເຮັດໃຫ້ພາລະກິດຂອງພຣະເຈົ້າຊັກຊ້າບໍ? ແລ້ວຖ້ານັ້ນເປັນຄວາມຈິງ, ເມື່ອໃດພາລະກິດຂອງພຣະເຈົ້າຈຶ່ງຈະສຳເລັດ? ອາດມີຄົນທີ່ມີແນວຄິດບາງຢ່າງກ່ຽວກັບສິ່ງທີ່ເຮົາຫາກໍເວົ້າ. ບາງເທື່ອ ພວກເຂົາບໍ່ເຊື່ອ. ແຕ່ເຮົາບໍ່ຢາກໃຫ້ເຈົ້າເປັນຫ່ວງກັງວົນ: ໃນອີກບໍ່ດົນ, ຫຼາຍສິ່ງແບບນີ້ຈະເກີດຂຶ້ນ ແລະ ມີພຽງຂໍ້ແທ້ຈິງທີ່ຈະສາມາດອະທິບາຍພວກມັນໄດ້. ໃຫ້ພວກເຮົາໄປເບິ່ງບຸກຄົນທີ່ສຳຄັນ ເຊັ່ນ: ສິດຍາພິບານບາງຄົນທີ່ມີຊື່ສຽງ ຫຼື ຜູ້ອະທິບາຍພຣະຄຳພີ ແລະ ເທດສະໜາກະແສນີ້ໃຫ້ແກ່ພວກເຂົາ. ພວກເຂົາຈະຕໍ່ຕ້ານຢ່າງເປີດເຜີຍໃນຄັ້ງທຳອິດ, ນັ້ນຄືສິ່ງທີ່ແນ່ນອນ, ແຕ່ພວກເຂົາຈະເອົາພຣະຄຳພີອອກມາເພື່ອທ້າທາຍເຈົ້າ. ພວກເຂົາຈະໃຫ້ເຈົ້າເລົ່າເລື່ອງຈາກໜັງສືເອຊາຢາ ແລະ ໜັງສືດານີເອນ ແລະ ພວກເຂົາເຖິງກັບຈະໃຫ້ເຈົ້າອະທິບາຍໜັງສືພຣະນິມິດ. ແລ້ວຖ້າເຈົ້າບໍ່ສາມາດເວົ້າກ່ຽວກັບສິ່ງນັ້ນໄດ້, ພວກເຂົາກໍຈະປະຕິເສດເຈົ້າ ແລະ ເອີ້ນເຈົ້າວ່າພຣະຄຣິດປອມ ແລະ ເວົ້າວ່າເຈົ້າກຳລັງເຜີຍແຜ່ໄປໃນທາງໄຮ້ສາລະ. ຫຼັງຈາກຊົ່ວໂມງໜຶ່ງ ພວກເຂົາກໍຈະກ່າວຫາເຈົ້າຢ່າງຜິດໆ ເຊິ່ງຈະເຮັດໃຫ້ເຈົ້າຕຶງຄຽດ. ນີ້ບໍ່ແມ່ນການຕໍ່ຕ້ານແບບເປີດເຜີຍບໍ? ແຕ່ນັ້ນເປັນພຽງການເລີ່ມຕົ້ນ. ພວກເຂົາບໍ່ສາມາດກີດກັ້ນຂັ້ນຕອນຕໍ່ໄປໃນພາລະກິດຂອງພຣະເຈົ້າ ແລະ ໃນອີກບໍ່ດົນພຣະວິນຍານບໍລິສຸດກໍຈະບັງຄັບໃຫ້ພວກເຂົາຍອມຮັບເອົາມັນ. ນີ້ຄືແນວທາງທີ່ບໍ່ມີການປານີປານອມ; ມັນຄືສິ່ງທີ່ມະນຸດບໍ່ສາມາດເຮັດໄດ້ ແລະ ສິ່ງທີ່ຜູ້ຄົນບໍ່ສາມາດແມ່ນແຕ່ຈະຈິນຕະນາການໄດ້. ເຮົາເຊື່ອວ່າພາລະກິດຂອງພຣະເຈົ້າຈະແຜ່ຂະຫຍາຍໄປທົ່ວຈັກກະວານໂດຍບໍ່ມີຫຍັງກີດກັ້ນໄດ້. ນີ້ຄືຄວາມປະສົງຂອງພຣະເຈົ້າ ແລະ ບໍ່ມີຜູ້ໃດສາມາດຢຸດມັນໄດ້. ຂໍໃຫ້ພຣະເຈົ້າສ່ອງແສງສະຫວ່າງແກ່ພວກເຮົາ ແລະ ອະນຸຍາດໃຫ້ພວກເຮົາຮັບເອົາແສງສະຫວ່າງໃໝ່ ແລະ ບໍ່ລົບກວນການຄຸ້ມຄອງຂອງພຣະເຈົ້າໃນເລື່ອງນີ້. ຂໍໃຫ້ພຣະເຈົ້າມີຄວາມເມດຕາຕໍ່ພວກເຮົາ ເພື່ອວ່າພວກເຮົາທຸກຄົນຈະສາມາດເຫັນການມາເຖິງຂອງມື້ແຫ່ງສະຫງ່າລາສີຂອງພຣະອົງ. ເວລາທີ່ພຣະເຈົ້າຈະສາມາດໄດ້ຮັບສະຫງ່າລາສີທົ່ວຈັກກະວານທັງປວງກໍຈະເປັນເວລາທີ່ພວກເຮົາໄດ້ຮັບເອົາສະຫງ່າລາສີຄຽງຂ້າງພຣະອົງ. ມັນເບິ່ງຄືກັບວ່າ

ນັ້ນຈະເປັນເວລາທີ່ເຮົາຈະຈາກຄົນທີ່ຍ່າງກັບເຮົາໄປອີກດ້ວຍ. ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາຈະຍົກສຽງຂອງພວກເຂົາຂຶ້ນພ້ອມກັບເຮົາເພື່ອອ້ອນວອນຫາພຣະເຈົ້າ: ຂໍໃຫ້ພາລະກິດອັນຍິ່ງໃຫຍ່ຂອງພຣະເຈົ້າສຳເລັດລົງໂດຍໄວ, ເພື່ອວ່າພວກເຮົາຈະໄດ້ເຫັນມື້ແຫ່ງສະຫງ່າລາສີຂອງພຣະອົງໃນຊ່ວງຊີວິດຂອງພວກເຮົາ. ເຮົາຍັງຫວັງທີ່ຈະບັນລຸຄວາມປະສົງຂອງພຣະເຈົ້າພາຍໃນຊ່ວງຊີວິດຂອງເຮົາ ແລະ ເຮົາຫວັງວ່າພຣະເຈົ້າຈະສືບຕໍ່ປະຕິບັດພາລະກິດຂອງພຣະອົງໃນພວກເຮົາ ແລະ ຈະບໍ່ມີອຸປະສັກໃດໆ. ນີ້ຄືຄວາມປາຖະໜາຊົ່ວນິດນິລັນຂອງເຮົາ. ຂໍໃຫ້ພຣະເຈົ້າຢູ່ທ່າມກາງພວກເຮົາ ແລະ ຂໍໃຫ້ຄວາມຮັກຂອງພຣະອົງສ້າງຂົວລະຫວ່າງພວກເຮົາ ເພື່ອວ່າມິດຕະພາບລະຫວ່າງພວກເຮົາຈະລໍ້າຄ່າຍິ່ງຂຶ້ນ. ເຮົາຫວັງວ່າ ຄວາມຮັກຈະສ້າງຄວາມເຂົ້າໃຈຫຼາຍຂຶ້ນລະຫວ່າງພວກເຮົາ ແລະ ຄວາມຮັກຈະສາມາດນຳພວກເຮົາໃຫ້ໃກ້ຊິດກັນຢ່າງເລິກເຊິ່ງຍິ່ງຂຶ້ນ, ກຳຈັດໄລຍະຫ່າງລະຫວ່າງພວກເຮົາ ເພື່ອວ່າຄວາມຮັກລະຫວ່າງພວກເຮົາຈະເລິກເຊິ່ງ, ກວ້າງອອກ ແລະ ຫວານຍິ່ງຂຶ້ນ. ເຮົາເຊື່ອວ່າ ສິ່ງນີ້ຕ້ອງເປັນຄວາມປະສົງຂອງພຣະເຈົ້າຂອງເຮົາ. ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາຈະຫຍັບເຂົ້າໃກ້ກັບເຮົາຫຼາຍຍິ່ງຂຶ້ນ ແລະ ພວກເຮົາທຸກຄົນຈະເຫັນຄຸນຄ່າເວລາອັນສັ້ນໆທີ່ພວກເຮົາຢູ່ຮ່ວມກັນນີ້ເພື່ອວ່າເວລາເຫຼົ່ານັ້ນຈະເຮັດໜ້າທີ່ເປັນຄວາມຊົງຈຳອັນສວຍງາມສຳລັບພວກເຮົາ.

ອາດມີຂັ້ນຕອນຕື່ມອີກໃນພາລະກິດຂອງພຣະເຈົ້າໃນປະເທດຈີນແຜ່ນດິນໃຫຍ່, ແຕ່ມັນອາດຈະບໍ່ສັບຊ້ອນ. ເມື່ອຄິດເບິ່ງແລ້ວ, ມັນຈະມີຄວາມໝາຍໃນທຸກຂັ້ນຕອນຂອງພາລະກິດຂອງພຣະອົງ; ແຕ່ລະຂັ້ນຕອນແມ່ນຖືກປະຕິບັດໂດຍພຣະເຈົ້າເອງ ແລະ ທຸກຄົນກໍຈະມີບົດບາດໃນພາລະກິດນີ້. ແຕ່ລະ "ສາກ" ແມ່ນເປັນຕາຫົວແທ້ໆ ແລະ ຜູ້ໃດຈະຈິນຕະນາການວ່າ ຄົນເຫຼົ່ານີ້ຈະສະແດງບົດລະຄອນດັ່ງກ່າວໄດ້, ການສະແດງຂອງພວກເຂົາເປັນຈິງໃນຊີວິດທີ່ຢູ່ທ່າມກາງການທົດລອງຫຼາຍ, ບຸກຄະລິກຂອງແຕ່ລະຄົນໄດ້ສະແດງອອກຢ່າງແຈ່ມແຈ້ງຫຼາຍ ແລະ ພາຍໃຕ້ປາກກາຂອງພຣະເຈົ້າ, ແຕ່ລະຢ່າງໄດ້ເປີດເຜີຍຕໍ່ສາທາລະນະຢ່າງກວ້າງຂວາງບໍ? ແຕ່ດ້ວຍສິ່ງນີ້, ເຮົາບໍ່ໄດ້ໝາຍຄວາມວ່າພຣະເຈົ້າກຳລັງລໍ້ຫຼິ້ນກັບຜູ້ຄົນຜ່ານທາງພາລະກິດຂອງພຣະອົງ. ສິ່ງນັ້ນຈະບໍ່ສົມເຫດສົມຜົນເລີຍ; ພາລະກິດຂອງພຣະເຈົ້າມີເປົ້າໝາຍ ແລະ ພຣະອົງຈະບໍ່ເຮັດຫຍັງທີ່ໄຮ້ຈຸດໝາຍ ຫຼື ໄຮ້ຄ່າ. ທຸກສິ່ງທີ່ພຣະອົງກະທຳແມ່ນເພື່ອເຮັດໃຫ້ຜູ້ຄົນສົມບູນ, ເພື່ອຮັບເອົາພວກເຂົາ. ຈາກສິ່ງນີ້ ເຮົາຈະເຫັນໄດ້ຢ່າງແທ້ຈິງວ່າຫົວໃຈຂອງພຣະເຈົ້າແມ່ນເພື່ອຜົນປະໂຫຍດຂອງມະນຸດ. ເຮົາອາດເອີ້ນສິ່ງນີ້ວ່າບົດລະຄອນ, ແຕ່ມັນຍັງສາມາດເວົ້າໄດ້ວ່າ ບົດລະຄອນນີ້ແມ່ນເອົາມາຈາກຊີວິດຈິງ. ມັນເປັນພຽງຍ້ອນວ່າ ສຳລັບພຣະເຈົ້າ ເຊິ່ງເປັນຜູ້ກຳກັບຫຼັກຂອງບົດລະຄອນເລື່ອງນີ້, ຜູ້ຄົນຈຶ່ງພຽງແຕ່ຮ່ວມມືກັບພຣະອົງໃນການເຮັດໃຫ້ພາລະກິດນີ້ສຳເລັດເທົ່ານັ້ນ. ເຖິງຢ່າງໃດກໍຕາມ ໃນອີກດ້ານໜຶ່ງ ພຣະເຈົ້າໃຊ້ສິ່ງນີ້ເພື່ອຮັບເອົາຜູ້ຄົນ ແລະ ເພື່ອເຮັດໃຫ້ພວກເຂົາຮັກພຣະອົງຍິ່ງຂຶ້ນ. ນີ້ບໍ່ແມ່ນຄວາມປະສົງຂອງພຣະເຈົ້າບໍ? ສະນັ້ນເຮົາຈຶ່ງຫວັງວ່າຈະບໍ່ມີຜູ້ໃດມີຄວາມກັງວົນກັບສິ່ງນີ້. ເຈົ້າບໍ່ຮູ້ຈັກຄວາມປະສົງຂອງພຣະເຈົ້າແທ້ບໍ? ເຮົາໄດ້ເວົ້າຫຼາຍຄັ້ງແລ້ວ, ເຮົາຫວັງວ່າ ອ້າຍເອື້ອຍນ້ອງຈະເຂົ້າໃຈມັນທັງໝົດ ແລະ ຈະບໍ່ຕີຄວາມໝາຍຫົວໃຈຂອງເຮົາຢ່າງຜິດໆ. ເຮົາໝັ້ນໃຈວ່າພວກເຈົ້າທຸກຄົນຈະຖືກຮັບເອົາໂດຍພຣະເຈົ້າ. ທຸກຄົນ

ແມ່ນຢ່າງໃນເສັ້ນທາງທີ່ແຕກຕ່າງກັນ. ຂໍໃຫ້ສິ່ງທີ່ຢູ່ພາຍໃຕ້ຕີນຂອງພວກເຈົ້າຖືກເປີດອອກໂດຍພຣະເຈົ້າ ແລະ ຂໍໃຫ້ພວກເຈົ້າອະທິຖານຫາພຣະອົງ ແລະ ເວົ້າວ່າ: ໂອ ພຣະເຈົ້າ! ຂ້ານ້ອຍປາຖະໜາໃຫ້ພຣະອົງຮັບເອົາຂ້ານ້ອຍ, ເພື່ອວ່າວິນຍານຂອງຂ້ານ້ອຍຈະກັບຄືນໄປຫາພຣະອົງ. ເຈົ້າພ້ອມທີ່ຈະສະແຫວງຫາການນຳພາຂອງພຣະເຈົ້າໃນສ່ວນເລິກຂອງຈິດວິນຍານຂອງເຈົ້າແລ້ວບໍ?

# ເສັ້ນທາງ... (5)

ໃນອະດີດ, ບໍ່ມີຜູ້ໃດຮູ້ຈັກພຣະວິນຍານບໍລິສຸດ, ແຮງໄກທີ່ພວກເຂົາຈະຮູ້ຈັກເສັ້ນທາງທີ່ພຣະວິນຍານບໍລິສຸດຍ່າງ. ນັ້ນຄືເຫດຜົນທີ່ຜູ້ຄົນເຮັດໃຫ້ຕົນເອງເປັນຕົວຕະຫຼົກຕໍ່ໜ້າພຣະເຈົ້າຢູ່ສະເໝີ. ມັນຖືກຕ້ອງແລ້ວທີ່ຈະເວົ້າວ່າ ເກືອບທຸກຄົນທີ່ເຊື່ອໃນພຣະເຈົ້າບໍ່ຮູ້ຈັກພຣະວິນຍານ ແລະ ທີ່ວ່າຄວາມເຊື່ອຂອງພວກເຂົາວຸ້ນວາຍ ແລະ ສັບສົນ. ຊັດເຈນຢູ່ແລ້ວ, ຜູ້ຄົນບໍ່ເຂົ້າໃຈພຣະເຈົ້າ; ແລະ ເຖິງແມ່ນປາກຂອງພວກເຂົາອາດເວົ້າວ່າພວກເຂົາເຊື່ອໃນພຣະອົງ, ແຕ່ໂດຍພື້ນຖານແລ້ວ ອີງຕາມພຶດຕິກຳຂອງພວກເຂົາ, ພວກເຂົາເຊື່ອໃນຕົນເອງ ແລະ ບໍ່ແມ່ນເຊື່ອໃນພຣະເຈົ້າ. ໃນປະສົບການຕົວຈິງຂອງເຮົາເອງ, ເຮົາໄດ້ເຫັນວ່າ ພຣະເຈົ້າເປັນພະຍານເຖິງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ຈາກພາຍນອກ ມັນປາກົດວ່າ ຜູ້ຄົນຖືກບັງຄັບໃຫ້ຮັບຮູ້ຄຳພະຍານຂອງພຣະເຈົ້າ, ມັນສາມາດເກືອບເວົ້າໄດ້ວ່າ ພວກເຂົາເຊື່ອວ່າພຣະວິນຍານຂອງພຣະເຈົ້າແມ່ນປາສະຈາກຂໍ້ຜິດພາດໂດຍສິ້ນເຊີງ. ເຖິງຢ່າງໃດກໍຕາມ, ເຮົາເວົ້າວ່າ ສິ່ງທີ່ຜູ້ຄົນເຊື່ອບໍ່ແມ່ນໃນບຸກຄົນນີ້, ແຮງໄກທີ່ຈະເປັນພຣະວິນຍານຂອງພຣະເຈົ້າ, ແຕ່ເປັນຄວາມຮູ້ສຶກຂອງພວກເຂົາເອງ. ການເຮັດແບບນັ້ນ ພວກເຂົາບໍ່ພຽງເຊື່ອໃນຕົນເອງເທົ່ານັ້ນບໍ? ສິ່ງທີ່ເຮົາເວົ້າແມ່ນເປັນຈິງ. ເຮົາບໍ່ໄດ້ຕິກາຜູ້ຄົນ, ແຕ່ມີສິ່ງໜຶ່ງທີ່ເຮົາຕ້ອງໄດ້ຊີ້ແຈງ: ບໍ່ວ່າພວກເຂົາຈະມີຄວາມຊັດເຈນ ຫຼື ສັບສົນກໍຕາມ, ສຳລັບຜູ້ຄົນທີ່ຖືກນຳມາເຖິງປັດຈຸບັນແມ່ນລ້ວນແລ້ວແຕ່ຂຶ້ນກັບພຣະວິນຍານບໍລິສຸດທັງນັ້ນ. ມັນບໍ່ແມ່ນສິ່ງທີ່ມະນຸດສາມາດຄວບຄຸມໄດ້. ນີ້ແມ່ນຕົວຢ່າງໃນສິ່ງທີ່ເຮົາໄດ້ກ່າວເຖິງກ່ອນໜ້ານີ້ ກ່ຽວກັບການທີ່ພຣະວິນຍານບໍລິສຸດບັງຄັບຄວາມເຊື່ອຂອງຜູ້ຄົນ; ນີ້ຄືວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ ແລະ ມັນຄືເສັ້ນທາງທີ່ພຣະວິນຍານບໍລິສຸດໄດ້ຍ່າງ. ໂດຍເນື້ອແທ້ແລ້ວ ບໍ່ວ່າຜູ້ຄົນຈະເຊື່ອໃນຜູ້ໃດກໍຕາມ, ພຣະວິນຍານບໍລິສຸດຈະມອບຄວາມຮູ້ສຶກປະເພດໃດໜຶ່ງໃຫ້ແກ່ຜູ້ຄົນຢ່າງແຮງ, ເຮັດໃຫ້ພວກເຂົາເຊື່ອໃນພຣະເຈົ້າທີ່ຢູ່ໃນຫົວໃຈຂອງພວກເຂົາ. ນັ້ນບໍ່ແມ່ນວິທີທີ່ເຈົ້າເຊື່ອບໍ? ເຈົ້າບໍ່ຮູ້ສຶກບໍວ່າຄວາມເຊື່ອຂອງເຈົ້າທີ່ມີໃນພຣະເຈົ້ານັ້ນເປັນສິ່ງທີ່ແປກປະຫຼາດ? ເຈົ້າບໍ່ຄິດບໍວ່າມັນແປກທີ່ເຈົ້າບໍ່ສາມາດຫຼົບໜີຈາກກະແສນີ້ໄດ້? ເຈົ້າບໍ່ໄດ້ພະຍາຍາມຄິດກ່ຽວກັບສິ່ງນີ້ບໍ? ນີ້ບໍ່ແມ່ນສິ່ງທີ່ຍິ່ງໃຫຍ່ທີ່ສຸດໃນບັນດາໝາຍສຳຄັນ ແລະ ສິ່ງອັດສະຈັນທັງປວງບໍ? ເຖິງແມ່ນເຈົ້າມີຄວາມຕ້ອງການທີ່ຈະຫຼົບໜີຫຼາຍຄັ້ງ, ມັນກໍຈະມີພະລັງຊີວິດຢ່າງຮຸນແຮງທີ່ດຶງດູດເຈົ້າຢູ່ສະເໝີ ແລະ ເຮັດໃຫ້ເຈົ້າລັງເລທີ່ຈະຍ່າງໜີ. ແລ້ວທຸກຄັ້ງທີ່ເຈົ້າຄົ້ນພົບວ່າຕົນເອງຢູ່ໃນສະຖານະການດັ່ງກ່າວ, ເຈົ້າກໍຈະເລີ່ມຮ້ອງໄຫ້ ແລະ ສະອຶກສະອື້ນສະເໝີ ໂດຍບໍ່ຮູ້ວ່າຈະເຮັດຫຍັງຕໍ່ໄປ. ພວກເຈົ້າບາງຄົນພະຍາຍາມທີ່ຈະຈາກໄປ, ແຕ່ເມື່ອພວກເຈົ້າພະຍາຍາມທີ່ຈະໄປ, ມັນຮູ້ສຶກຄືກັບມີດແທງໃນຫົວໃຈຂອງເຈົ້າ, ມັນຮູ້ສຶກຄືກັບວ່າວິນຍານຂອງເຈົ້າຖືກເອົາໄປຈາກເຈົ້າໂດຍຜີບາງຕົນທີ່ຢູ່ເທິງແຜ່ນດິນໂລກ, ປ່ອຍໃຫ້ຫົວໃຈຂອງເຈົ້າກະວົນກະວາຍ ແລະ ປາສະຈາກສັນຕິສຸກ. ຫຼັງຈາກນັ້ນເຈົ້າກໍຈະບໍ່ສາມາດເຮັດຫຍັງໄດ້ ນອກຈາກຕຽມຕົນເອງ ແລະ ກັບຄືນໄປຫາພຣະເຈົ້າ... ເຈົ້າບໍ່ໄດ້ມີປະສົບການນີ້ບໍ? ເຮົາໝັ້ນໃຈວ່າ ອ້າຍເອື້ອຍນ້ອງທີ່ຍັງໜຸ່ມນ້ອຍ ຜູ້ທີ່ສາມາດເປີດຫົວໃຈຂອງ

ພວກເຂົາອອກຈະເວົ້າວ່າ: "ແມ່ນແລ້ວ! ຂ້ານ້ອຍໄດ້ພະເຊີນສິ່ງນີ້ຫຼາຍຄັ້ງ, ມັນເຮັດໃຫ້ຂ້ານ້ອຍລະອາຍໃຈທີ່ຈະຄິດເຖິງມັນ!" ໃນຊີວິດປະຈຳວັນຂອງເຮົາເອງ, ເຮົາມີຄວາມສຸກຢູ່ສະເໝີທີ່ຈະປະຕິບັດຕໍ່ອ້າຍເອື້ອຍນ້ອງທີ່ໜຸ່ມນ້ອຍນີ້ຂອງເຮົາເປັນຄືກັບເພື່ອນສະນິດຂອງເຮົາ, ຍ້ອນມີຄວາມໄຮ້ດຽງສາຢ່າງຫຼາຍໃນພວກເຂົາ, ພວກເຂົາບໍລິສຸດ ແລະ ເປັນຕາຮັກຫຼາຍ. ພວກເຂົາເປັນຄືກັບເພື່ອນຂອງເຮົາເອງ. ນີ້ຄືເຫດຜົນທີ່ເຮົາຊອກຫາໂອກາດຢູ່ສະເໝີເພື່ອນຳເອົາເພື່ອນສະນິດທຸກຄົນຂອງເຮົາມາຮ່ວມກັນເພື່ອໂອ້ລົມກ່ຽວກັບອຸດົມການ ແລະ ແຜນການຂອງພວກເຮົາ. ຂໍໃຫ້ຄວາມປະສົງຂອງພຣະເຈົ້າຖືກປະຕິບັດໃນພວກເຮົາ ເພື່ອວ່າພວກເຮົາທຸກຄົນຈະເປັນຄືກັບເນື້ອໜັງ ແລະ ເລືອດ ໂດຍປາສະຈາກສິ່ງກີດກັ້ນ ຫຼື ໄລຍະຫ່າງລະຫວ່າງພວກເຮົາ. ຂໍໃຫ້ພວກເຮົາທຸກຄົນອະທິຖານຫາພຣະເຈົ້າວ່າ: "ໂອພຣະເຈົ້າ! ຖ້າມັນຄືຄວາມປະສົງຂອງພຣະອົງ, ພວກຂ້ານ້ອຍກໍຂໍໃຫ້ພຣະອົງມອບສະພາບແວດລ້ອມທີ່ເໝາະສົມໃຫ້ແກ່ພວກຂ້ານ້ອຍ, ເພື່ອວ່າພວກຂ້ານ້ອຍຈະໄດ້ບັນລຸຄວາມປາຖະໜາໃນຫົວໃຈຂອງພວກຂ້ານ້ອຍ. ຂໍໃຫ້ພຣະອົງມີຄວາມເມດຕາແກ່ພວກຂ້ານ້ອຍ ຜູ້ທີ່ຍັງໜຸ່ມນ້ອຍ ແລະ ຂາດເຫດຜົນ ແລະ ຈົ່ງໂຜດໃຫ້ພວກຂ້ານ້ອຍມີພະລັງໃນຫົວໃຈຂອງພວກຂ້ານ້ອຍດ້ວຍເທີດ!" ເຮົາເຊື່ອວ່າ ນີ້ຄືຄວາມປະສົງຂອງພຣະເຈົ້າ, ເພາະວ່າເຮົາໄດ້ອະທິຖານຫາພຣະເຈົ້າຕັ້ງແຕ່ດົນນານແລ້ວ ແລະ ອະທິຖານວ່າ: "ພຣະບິດາ! ເທິງແຜ່ນດິນໂລກ, ພວກຂ້ານ້ອຍໄດ້ຮ້ອງໄຫ້ຫາພຣະອົງໂດຍບໍ່ຢຸດເຊົາ, ປາຖະໜາຢາກໃຫ້ຄວາມປະສົງຂອງພຣະອົງຖືກປະຕິບັດເທິງແຜ່ນດິນໂລກໂດຍໄວ. ຂ້ານ້ອຍຈະສະແຫວງຫາຄວາມປະສົງຂອງພຣະອົງ. ຂໍໃຫ້ພຣະອົງເຮັດສິ່ງທີ່ພຣະອົງຕ້ອງການເຮັດ ແລະ ສຳເລັດການຝາກຝັງຂອງພຣະອົງໃນຕົວຂ້ານ້ອຍໂດຍໄວ. ຂ້ານ້ອຍເຕີງກັບເຕັມໃຈທີ່ຈະໃຫ້ພຣະອົງເປີດເສັ້ນທາງໃໝ່ອອກທ່າມກາງພວກຂ້ານອຍ, ຖ້າມັນໝາຍຄວາມວ່າ ຄວາມປະສົງຂອງພຣະອົງຈະຖືກເຮັດໃຫ້ສຳເລັດໂດຍໄວ! ຂ້ານ້ອຍພຽງແຕ່ຂໍໃຫ້ພາລະກິດຂອງພຣະອົງໄດ້ສຳເລັດໂດຍໄວ ແລະ ຂ້ານ້ອຍເຊື່ອວ່າບໍ່ມີກົດລະບຽບໃດທີ່ສາມາດຢັບຢັ້ງມັນໄດ້!" ນັ້ນຄືພາລະກິດຂອງພຣະເຈົ້າໃນປັດຈຸບັນ; ເຈົ້າບໍ່ເຫັນເສັ້ນທາງທີ່ພຣະວິນຍານບໍລິສຸດໄດ້ຢ່າງບໍ? ທຸກຄັ້ງທີ່ເຮົາພົບກັບອ້າຍເອື້ອຍນ້ອງຮຸ່ນອາວຸໂສ, ເຮົາມີຄວາມຮູ້ສຶກເຖິງຄວາມກົດຂີ່ຢ່າງອະທິບາຍບໍ່ຖືກ. ເມື່ອເຮົາພົບກັບພວກເຂົາ, ເຮົາເຫັນວ່າພວກເຂົາເຕັມໄປດ້ວຍສັງຄົມ; ແນວຄິດທາງສາສະໜາຂອງພວກເຂົາ, ປະສົບການໃນການຈັດການສິ່ງຕ່າງໆຂອງພວກເຂົາ, ວິທີການເວົ້າຂອງພວກເຂົາ, ຄຳເວົ້າທີ່ພວກເຂົາໃຊ້ ແລະ ອື່ນໆອີກ, ພວກມັນລ້ວນແລ້ວແຕ່ເປັນຕາໜ້າເບື່ອຫຼາຍ. ພວກມັນເຕັມໄປດ້ວຍ "ສະຕິປັນຍາ" ຕາມຈິນຕະນາການ. ເຮົາຢູ່ຫ່າງຈາກພວກເຂົາໃຫ້ຫຼາຍເທົ່າທີ່ສາມາດເຮັດໄດ້ສະເໝີ, ຍ້ອນວ່າ ໂດຍສ່ວນຕົວເຮົາເອງແລ້ວ, ເຮົາບໍ່ໄດ້ປະກອບມີປັດຊະຍາໃນການດຳລົງຊີວິດເທິງແຜ່ນດິນໂລກ. ທຸກຄັ້ງທີ່ເຮົາພົບກັບຄົນເຫຼົ່ານີ້, ພວກເຂົາເຮັດໃຫ້ເຮົາໝົດແຮງ, ຫົວຂອງເຮົາເຕັມໄປດ້ວຍເຫື່ອ; ບາງເທື່ອ ເຮົາກໍຮູ້ສຶກວ່າຖືກກົດຂີ່ຫຼາຍຈົນເຮົາເກືອບຈະຫາຍໃຈບໍ່ໄດ້. ສະນັ້ນໃນຊ່ວງເວລາທີ່ອັນຕະລາຍນີ້, ພຣະເຈົ້າໄດ້ມອບທາງອອກທີ່ຍິ່ງໃຫຍ່ໃຫ້ແກ່ເຮົາ. ບາງເທື່ອ ນັ້ນເປັນພຽງຄວາມຄິດຜິດໆຂອງເຮົາ. ເຮົາພຽງແຕ່ສົນໃຈໃນສິ່ງທີ່ເປັນປະໂຫຍດຕໍ່ພຣະເຈົ້າ; ການປະຕິບັດຕາມຄວາມປະສົງຂອງພຣະເຈົ້າແມ່ນສິ່ງທີ່ສຳຄັນທີ່ສຸດ. ເຮົາຢູ່ຫ່າງຈາກຄົນ

ເຫຼົ່ານີ້, ແຕ່ຖ້າພຣະເຈົ້າຕ້ອງການໃຫ້ເຮົາພົບກັບພວກເຂົາ, ເຮົາກໍຈະເຊື່ອຟັງ. ມັນບໍ່ແມ່ນວ່າພວກເຂົາເປັນຕາລັງກຽດ, ແຕ່ "ສະຕິປັນຍາ" ຂອງພວກເຂົາ, ແນວຄິດ ແລະ ປັດຊະຍາແຫ່ງການດຳລົງຊີວິດຂອງພວກເຂົາເທິງແຜ່ນດິນໂລກແມ່ນເປັນຕາລັງກຽດຫຼາຍ. ເຮົາມາເພື່ອເຮັດໃຫ້ການຝາກຝັງຂອງພຣະເຈົ້າສຳເລັດ, ບໍ່ແມ່ນເພື່ອຮຽນຮູ້ວິທີທີ່ພວກເຂົາເຮັດສິ່ງຕ່າງໆ. ເຮົາຈື່ວ່າໃນຄັ້ງໜຶ່ງ ພຣະເຈົ້າໄດ້ເວົ້າແນວໃດກັບເຮົາ, ພຣະອົງເວົ້າວ່າ: "ເທິງແຜ່ນດິນໂລກ, ໃຫ້ສະແຫວງຫາເພື່ອປະຕິບັດຄວາມປະສົງຂອງພຣະບິດາຂອງເຈົ້າເທົ່ານັ້ນ ແລະ ເຮັດໃຫ້ການຝາກຝັງຂອງພຣະອົງສຳເລັດ. ບໍ່ມີສິ່ງໃດອີກທີ່ກ່ຽວຂ້ອງກັບເຈົ້າ". ເມື່ອຄິດເຖິງສິ່ງນີ້ເຮັດໃຫ້ເຮົາສະຫງົບສຸກຫຼາຍຂຶ້ນ. ນັ້ນກໍຍ້ອນບັນຫາຂອງມະນຸດຮູ້ສຶກວ່າສັບສົນຫຼາຍສຳລັບເຮົາ; ເຮົາບໍ່ສາມາດເຂົ້າໃຈສິ່ງເຫຼົ່ານັ້ນໄດ້ ແລະ ເຮົາບໍ່ຮູ້ວ່າຈະເຮັດແນວໃດເລີຍ. ສະນັ້ນ ເປັນເວລາຫຼາຍຄັ້ງຈົນນັບບໍ່ຖ້ວນ ເຮົາໄດ້ຖືກປ່ອຍໃຫ້ກະວົນກະວາຍໃຈຍ້ອນສິ່ງນີ້ ແລະ ກຽດຊັງມະນຸດຊາດ; ເປັນຫຍັງຜູ້ຄົນຈຶ່ງຕ້ອງເຮັດໃຫ້ສັບສົນແບບນີ້? ເປັນຫຍັງພວກເຂົາບໍ່ເປັນຄົນລຽບງ່າຍ? ເປັນຫຍັງຈຶ່ງເຮັດໃຫ້ຫຍຸ້ງຍາກໂດຍພະຍາຍາມເປັນຄົນສະຫຼາດ? ເມື່ອເຮົາພົບກັບຜູ້ຄົນໂດຍສ່ວນໃຫຍ່ແລ້ວ ແມ່ນອີງຕາມການມອບໝາຍຂອງພຣະເຈົ້າທີ່ພຣະອົງມອບໝາຍໃຫ້ກັບເຮົາ. ອາດມີສອງສາມຄັ້ງທີ່ບໍ່ແມ່ນຍ້ອນການມອບໝາຍຂອງພຣະອົງ, ແຕ່ຜູ້ໃດຈະຮູ້ເຖິງສິ່ງທີ່ລີ້ລັບໃນສ່ວນເລິກຂອງຫົວໃຈຂອງເຮົາ?

ຫຼາຍຄັ້ງເຮົາໄດ້ແນະນຳໃຫ້ອ້າຍເອື້ອຍນ້ອງທີ່ຢູ່ກັບເຮົາວ່າ ພວກເຂົາຄວນເຊື່ອໃນພຣະເຈົ້າດ້ວຍຫົວໃຈຂອງພວກເຂົາ, ພວກເຂົາບໍ່ຄວນຊອກຫາຜົນປະໂຫຍດຂອງພວກເຂົາເອງ, ແຕ່ໃຫ້ເອົາໃຈໃສ່ໃນຄວາມປະສົງຂອງພຣະເຈົ້າ. ຫຼາຍຄັ້ງເຮົາໄດ້ຮ້ອງໄຫ້ດ້ວຍຄວາມທຸກທໍລະມານຕໍ່ໜ້າພຣະເຈົ້າ: ເປັນຫຍັງຜູ້ຄົນຈຶ່ງບໍ່ເອົາໃຈໃສ່ໃນຄວາມປະສົງຂອງພຣະເຈົ້າ? ແນ່ນອນ ພາລະກິດຂອງພຣະເຈົ້າບໍ່ສາມາດຫາຍໄປໂດຍບໍ່ມີຮ່ອງຮອຍ ຢ່າງໄຮ້ເຫດຜົນ? ຫຼື ເຮົາບໍ່ຮູ້ວ່າເປັນຫຍັງ ສິ່ງນີ້ຈຶ່ງເກືອບກາຍມາເປັນຄຳຖາມໃນຈິດໃຈຂອງເຮົາ, ເປັນຫຍັງຜູ້ຄົນຈຶ່ງບໍ່ຮັບຮູ້ເສັ້ນທາງທີ່ພຣະວິນຍານບໍລິສຸດໄດ້ຍ່າງ, ແຕ່ພາກັນຍຶດຕິດກັບຄວາມສຳພັນຢ່າງບໍ່ປົກກະຕິກັບຄົນອື່ນ? ການໄດ້ເຫັນຜູ້ຄົນແບບນີ້ເຮັດໃຫ້ເຮົາປັ່ນທ້ອງປວດຮາກ. ແທນທີ່ຈະຊອກຫາເສັ້ນທາງຂອງພຣະວິນຍານບໍລິສຸດ, ພວກເຂົາໃຫ້ຄວາມສົນໃຈກັບການກະທຳຂອງມະນຸດ. ແລ້ວພຣະເຈົ້າຈະພໍໃຈກັບສິ່ງນີ້ໄດ້ບໍ? ເຮົາເສຍໃຈສະເໝີກັບສິ່ງນີ້. ມັນເກືອບໄດ້ກາຍມາເປັນພາລະຂອງເຮົາ ແລະ ມັນລົບກວນພຣະວິນຍານບໍລິສຸດເຊັ່ນກັນ. ເຈົ້າບໍ່ຮູ້ສຶກເຖິງການຕຳນິຕິເຕືອນຫຍັງໃນຫົວໃຈຂອງເຈົ້າບໍ? ຂໍໃຫ້ພຣະເຈົ້າເປີດຕາແຫ່ງວິນຍານຂອງພວກເຮົາ. ຫຼາຍຄັ້ງທີ່ເຮົາ ຜູ້ເຊິ່ງນຳພາຜູ້ຄົນເພື່ອເຂົ້າສູ່ພາລະກິດຂອງພຣະເຈົ້າ ໄດ້ອະທິຖານຕໍ່ໜ້າພຣະເຈົ້າວ່າ: "ໂອ ພຣະບິດາ! ຂ້ານ້ອຍຫວັງວ່າຄວາມປະສົງຂອງພຣະອົງຈະກາຍເປັນແກ່ນສຳຄັນ, ຂ້ານ້ອຍຈະຄົ້ນຫາຄວາມປະສົງຂອງພຣະອົງ, ຂ້ານ້ອຍຫວັງວ່າຂ້ານ້ອຍຈະຊື່ສັດຕໍ່ການຝາກຝັງຂອງພຣະອົງ, ເພື່ອພຣະອົງຈະໄດ້ຮັບເອົາຄົນກຸ່ມນີ້. ຂໍໃຫ້ພຣະອົງນຳພວກຂ້ານ້ອຍໄປສູ່ດິນແດນແຫ່ງອິດສະຫຼະພາບ, ເພື່ອວ່າພວກຂ້ານ້ອຍຈະໄດ້ສຳຜັດພຣະອົງດ້ວຍວິນຍານຂອງພວກຂ້ານ້ອຍ ແລະ ຂໍໃຫ້ພຣະອົງປຸກຄວາມຮູ້ສຶກຝ່າຍວິນຍານໃຫ້ຕື່ນຂຶ້ນໃນພາຍໃນຫົວໃຈຂອງພວກຂ້ານ້ອຍດ້ວຍເທີດ!" ເຮົາຫວັງວ່າ

ຄວາມປະສົງຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງອະທິຖານຢ່າງບໍ່ຢຸດເຊົາ ເພື່ອໃຫ້ພຣະວິນຍານຂອງພຣະອົງສືບຕໍ່ສ່ອງແສງສະຫວ່າງແກ່ພວກເຮົາ, ເພື່ອພວກເຮົາຈະຍ່າງໃນເສັ້ນທາງທີ່ພຣະວິນຍານບໍລິສຸດໄດ້ນຳພາ, ຍ້ອນວ່າ ເສັ້ນທາງທີ່ເຮົາຍ່າງແມ່ນເສັ້ນທາງຂອງພຣະວິນຍານບໍລິສຸດ. ແລ້ວຜູ້ໃດອີກຈະສາມາດຍ່າງໃນເສັ້ນທາງນີ້ແທນເຮົາໄດ້? ນີ້ຄືສິ່ງທີ່ເຮັດໃຫ້ພາລະຂອງເຮົາຍິ່ງໜັກຂຶ້ນ. ເຮົາຮູ້ສຶກຄືກັບວ່າເຮົາກຳລັງຈະລົ້ມ, ແຕ່ເຮົາມີຄວາມເຊື່ອວ່າພຣະເຈົ້າຈະບໍ່ເຮັດໃຫ້ພາລະກິດຂອງພຣະອົງຊັກຊ້າຈັກເທື່ອ. ບາງເທື່ອ ພວກເຮົາຈະພຽງແຕ່ແຍກທາງກັນ ຫຼັງຈາກທີ່ການຝາກຝັງຂອງພຣະອົງຖືກເຮັດໃຫ້ສຳເລັດແລ້ວ. ສະນັ້ນ ບາງເທື່ອ ມັນກໍຍ້ອນຜົນຕາມມາຂອງພຣະວິນຍານຂອງພຣະເຈົ້າທີ່ເຮົາຮູ້ສຶກແຕກຕ່າງຢູ່ສະເໝີ. ມັນຄືກັບວ່າມີພາລະກິດທີ່ພຣະເຈົ້າຕ້ອງການປະຕິບັດ, ແຕ່ເຮົາຍັງບໍ່ສາມາດເຂົ້າໃຈວ່າມັນແມ່ນຫຍັງ. ແຕ່ເຮົາກໍເຊື່ອວ່າ ບໍ່ມີຜູ້ໃດເທິງແຜ່ນດິນໂລກທີ່ດີກວ່າເພື່ອນສະນິດຂອງເຮົາ ແລະ ເຮົາເຊື່ອວ່າພວກເຂົາຈະອະທິຖານເພື່ອເຮົາຕໍ່ໜ້າພຣະເຈົ້າ, ເຊິ່ງເຮົາຕື້ນຕັນໃຈຫຼາຍເຫຼືອເກີນ. ເຮົາປາຖະໜາທີ່ຈະໃຫ້ອ້າຍເອື້ອຍນ້ອງເວົ້າພ້ອມກັບເຮົາວ່າ: "ໂອ ພຣະເຈົ້າ! ຂໍໃຫ້ຄວາມປະສົງຂອງພຣະອົງຊັດແຈ້ງຢ່າງສົມບູນໃນພວກຂ້ານ້ອຍ ເຊິ່ງກໍຄືຜູ້ຄົນທີ່ຢູ່ໃນຍຸກສຸດທ້າຍ, ເພື່ອວ່າພວກຂ້ານ້ອຍຈະໄດ້ຮັບພອນດ້ວຍຊີວິດແຫ່ງວິນຍານ ແລະ ເຫັນເຖິງການກະທຳຂອງພຣະວິນຍານຂອງພຣະເຈົ້າ ແລະ ຫຼຽວເບິ່ງໃບໜ້າທີ່ແທ້ຈິງຂອງພຣະອົງ!" ຫຼັງຈາກທີ່ພວກເຮົາໄດ້ບັນລຸເຖິງບາດກ້າວນີ້ ພວກເຮົາກໍຈະດຳລົງຊີວິດຢູ່ພາຍໃຕ້ການນຳພາຂອງພຣະວິນຍານຢ່າງແທ້ຈິງ ແລະ ມີແຕ່ເມື່ອນັ້ນ ພວກເຮົາຈຶ່ງຈະສາມາດຫຼຽວເບິ່ງໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ນັ້ນໝາຍຄວາມວ່າຜູ້ຄົນຈະສາມາດເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງຄວາມຈິງທັງໝົດ, ບໍ່ເຂົ້າໃຈ ຫຼື ຢັ່ງຮູ້ຕາມແນວຄິດຂອງມະນຸດ, ແຕ່ຕາມແສງສະຫວ່າງແຫ່ງຄວາມປະສົງຂອງພຣະວິນຍານຂອງພຣະເຈົ້າ. ນີ້ຄືພາລະກິດທັງໝົດຂອງພຣະເຈົ້າເອງ, ບໍ່ໄດ້ມີຄວາມຄິດຂອງມະນຸດໃນພາລະກິດນີ້; ມັນຄືແຜນການພາລະກິດຂອງພຣະອົງສຳລັບການກະທຳທີ່ພຣະອົງປາຖະໜາຈະເຮັດໃຫ້ຊັດແຈ້ງເທິງແຜ່ນດິນໂລກ ແລະ ມັນຄືສ່ວນສຸດທ້າຍຂອງພາລະກິດຂອງພຣະອົງເທິງແຜ່ນດິນໂລກ. ເຈົ້າປາຖະໜາທີ່ຈະຮ່ວມໃນພາລະກິດນີ້ບໍ? ເຈົ້າປາຖະໜາທີ່ຈະເປັນສ່ວນໜຶ່ງຂອງພາລະກິດນີ້ບໍ? ເຈົ້າຕ້ອງການທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະວິນຍານບໍລິສຸດ ແລະ ເຂົ້າຮ່ວມໃນຊີວິດຝ່າຍວິນຍານບໍ?

ກະແຈສຳຄັນໃນມື້ນີ້ຄືການລົງເລິກຈາກພື້ນຖານດັ້ງເດີມຂອງພວກເຮົາ. ພວກເຮົາຕ້ອງລົງເລິກສູ່ຄວາມຈິງ, ນິມິດ ແລະ ຊີວິດ, ແຕ່ກ່ອນອື່ນ ເຮົາຕ້ອງເຕືອນອ້າຍເອື້ອຍນ້ອງວ່າ ເພື່ອເຂົ້າສູ່ບາດກ້າວນີ້ໃນພາລະກິດ, ເຈົ້າຕ້ອງປະຖິ້ມແນວຄິດຜ່ານມາຂອງເຈົ້າ. ນັ້ນກໍຄື ເຈົ້າຕ້ອງປ່ຽນແປງວິທີທີ່ເຈົ້າດຳລົງຊີວິດ, ວາງແຜນໃໝ່, ເລີ່ມປະພຶດໃນທາງທີ່ດີຂຶ້ນ. ຖ້າເຈົ້າຍັງຍຶດຕິດກັບສິ່ງທີ່ລ້ຳຄ່າກັບເຈົ້າໃນອະດີດ, ພຣະວິນຍານບໍລິສຸດກໍຈະບໍ່ສາມາດປະຕິບັດພາລະກິດໃນຕົວເຈົ້າ ແລະ ພຣະອົງເກືອບຈະບໍ່ສາມາດປະຄອງຊີວິດຂອງເຈົ້າ. ຄົນທີ່ບໍ່ສະແຫວງຫາ ຫຼື ເຂົ້າສູ່ ຫຼື ວາງແຜນກໍຈະຖືກປະຖິ້ມທັງໝົດໂດຍພຣະວິນຍານບໍລິສຸດ ແລະ ດ້ວຍເຫດນັ້ນຈຶ່ງເວົ້າໄດ້ວ່າ ພວກເຂົາໄດ້ຖືກປະຖິ້ມໂດຍຍຸກນັ້ນໆ. ເຮົາຫວັງວ່າອ້າຍເອື້ອຍນ້ອງທຸກຄົນຈະສາມາດເຂົ້າໃຈຫົວໃຈຂອງເຮົາ ແລະ ເຮົາຫວັງວ່າ "ສະມາຊິກໃໝ່"

ຈະຢືນຂຶ້ນເພື່ອຮ່ວມມືກັບພຣະເຈົ້າຫຼາຍຂຶ້ນ ແລະ ສຳເລັດພາລະກິດນີ້ຮ່ວມກັນ. ເຮົາເຊື່ອວ່າພຣະເຈົ້າຈະອວຍພອນພວກເຮົາ. ເຊັ່ນກັນ ເຮົາເຊື່ອວ່າພຣະເຈົ້າຈະມອບເພື່ອນສະນິດໃຫ້ເຮົາຫຼາຍຍິ່ງຂຶ້ນ, ເພື່ອວ່າເຮົາຈະຍ່າງຢູ່ທຸກມຸມເທິງແຜ່ນດິນໂລກ ແລະ ອາດມີຄວາມຮັກຫຼາຍຂຶ້ນລະຫວ່າງພວກເຮົາ. ຍິ່ງໄປກວ່ານັ້ນ ເຮົາເຊື່ອວ່າພຣະເຈົ້າຈະຂະຫຍາຍອານາຈັກຂອງພຣະອົງ ຍ້ອນຄວາມພະຍາຍາມຂອງພວກເຮົາ; ເຮົາຫວັງວ່າຄວາມພະຍາຍາມຂອງພວກເຮົາຈະໄປເຖິງລະດັບທີ່ບໍ່ເຄີຍມີມາກ່ອນ, ເຮັດໃຫ້ພຣະເຈົ້າໄດ້ຮັບເອົາຄົນໜຸ່ມຫຼາຍຂຶ້ນ. ເຮົາຕ້ອງການໃຫ້ພວກເຮົາໃຊ້ເວລາອະທິຖານເພື່ອສິ່ງນີ້, ເຮົາຕ້ອງການໃຫ້ພວກເຮົາອະທິຖານໂດຍບໍ່ຢຸດເຊົາ, ເພື່ອວ່າພວກເຮົາຈະໃຊ້ຊີວິດທັງໝົດຂອງພວກເຮົາຕໍ່ໜ້າພຣະເຈົ້າ ແລະ ໃກ້ຊິດກັບພຣະເຈົ້າຫຼາຍເທົ່າທີ່ຈະສາມາດເຮັດໄດ້. ຂໍໃຫ້ບໍ່ມີຫຍັງລະຫວ່າງພວກເຮົາອີກ ແລະ ຂໍໃຫ້ພວກເຮົາທຸກຄົນກ່າວຄຳສາບານຕໍ່ໜ້າພຣະເຈົ້າວ່າ: ຈະເຮັດວຽກໜັກຮ່ວມກັນ! ຈະຊື່ສັດຈົນເຖິງທີ່ສຸດ! ຈະບໍ່ຈາກກັນໄປ ແລະ ຢູ່ຮ່ວມກັນສະເໝີໄປ! ເຮົາຫວັງວ່າອ້າຍເອື້ອຍນ້ອງທຸກຄົນຈະເຮັດຄຳສັນຍານີ້ຕໍ່ໜ້າພຣະເຈົ້າ, ເພື່ອວ່າຫົວໃຈຂອງພວກເຮົາຈະບໍ່ປ່ຽນແປງຈັກເທື່ອ ແລະ ຄວາມຕັ້ງໃຈຂອງພວກເຮົາຈະບໍ່ສັ່ນຄອນຈັກເທື່ອ! ເພື່ອເຫັນແກ່ຄວາມປະສົງຂອງພຣະເຈົ້າ, ເຮົາຈະເວົ້າອີກຄັ້ງວ່າ: ໃຫ້ພວກເຮົາເຮັດວຽກໜັກ! ໃຫ້ພວກເຮົາພະຍາຍາມດ້ວຍສຸດກຳລັງຂອງພວກເຮົາ! ພຣະເຈົ້າຈະອວຍພອນພວກເຮົາຢ່າງແນ່ນອນ!

# ເສັ້ນທາງ... (6)

ມັນເປັນຍ້ອນພາລະກິດຂອງພຣະເຈົ້າ ພວກເຮົາຈຶ່ງໄດ້ຢູ່ມາເຖິງປັດຈຸບັນ ແລະ ດ້ວຍເຫດນັ້ນ ພວກເຮົາຈຶ່ງເປັນຜູ້ລອດຊີວິດໃນແຜນການຄຸ້ມຄອງຂອງພຣະເຈົ້າ. ການທີ່ພວກເຮົາຍັງຄົງຢູ່ໃນປັດຈຸບັນ ແມ່ນການຊ່ວຍເຫຼືອຢ່າງໃຫຍ່ຫຼວງຈາກພຣະເຈົ້າ, ຍ້ອນວ່າ ອີງຕາມແຜນການຂອງພຣະເຈົ້າແລ້ວ ປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ຄວນຖືກທຳລາຍ. ແຕ່ເຮົາຄິດວ່າ ບາງເທື່ອ ພຣະອົງໄດ້ສ້າງອີກແຜນການໜຶ່ງ ຫຼື ພຣະອົງປາຖະໜາທີ່ຈະປະຕິບັດອີກສ່ວນໜຶ່ງຂອງພາລະກິດຂອງພຣະອົງ, ສະນັ້ນ ແມ່ນແຕ່ໃນປັດຈຸບັນ ເຮົາກໍຍັງບໍ່ສາມາດອະທິບາຍສິ່ງນີ້ໄດ້ຢ່າງຊັດເຈນ, ມັນເປັນຄືກັບປິດສະໜາທີ່ບໍ່ສາມາດແກ້ໄດ້. ແຕ່ໂດຍລວມແລ້ວ, ພວກເຮົາກຸ່ມນີ້ແມ່ນຖືກກຳນົດໄວ້ລ່ວງໜ້າໂດຍພຣະເຈົ້າ ແລະ ເຮົາກໍສືບຕໍ່ເຊື່ອວ່າພຣະເຈົ້າມີອີກພາລະກິດອື່ນໃນພວກເຮົາ. ຂໍໃຫ້ພວກເຮົາທຸກຄົນອ້ອນວອນຕໍ່ສະຫວັນແບບນີ້: “ຂໍໃຫ້ຄວາມປະສົງຂອງພຣະອົງສຳເລັດ ແລະ ຂໍໃຫ້ພຣະອົງປາກົດຕໍ່ພວກຂ້ານ້ອຍອີກຄັ້ງ ແລະ ບໍ່ປິດບັງພຣະອົງເອງ ເພື່ອວ່າພວກຂ້ານ້ອຍຈະໄດ້ເຫັນສະຫງ່າລາສີຂອງພຣະອົງ ແລະ ໃບໜ້າຂອງພຣະອົງຢ່າງຊັດເຈນຂຶ້ນຕື່ມ”. ມັນແມ່ນຄວາມຮູ້ສຶກຂອງເຮົາຢູ່ຕະຫຼອດວ່າ ເສັ້ນທາງທີ່ພຣະເຈົ້ານຳພາພວກເຮົາບໍ່ແມ່ນທາງຊື່, ແຕ່ເປັນເສັ້ນທາງຄົດລ້ຽວທີ່ເຕັມໄປດ້ວຍຂຸມ; ຍິ່ງໄປກວ່ານັ້ນ ພຣະເຈົ້າກ່າວວ່າ ຍິ່ງເສັ້ນທາງມີກ້ອນຫີນຫຼາຍສໍ່າໃດ, ມັນກໍຍິ່ງສາມາດເປີດເຜີຍຫົວໃຈແຫ່ງຄວາມຮັກຂອງພວກເຮົາຫຼາຍສໍ່ານັ້ນ. ແຕ່ບໍ່ມີຜູ້ໃດໃນບັນດາພວກເຮົາທີ່ສາມາດເປີດເສັ້ນທາງດັ່ງກ່າວນັ້ນໄດ້. ໃນປະສົບການຂອງເຮົາ, ເຮົາໄດ້ຍ່າງໃນເສັ້ນທາງຫຼາຍເສັ້ນທີ່ມີກ້ອນຫີນ ແລະ ກັນດານຫຼາຍ ແລະ ເຮົາໄດ້ອົດກັ້ນກັບການທົນທຸກຢ່າງໃຫຍ່; ບາງຄັ້ງ ເຮົາເຖິງກັບຫົດຫູ່ໃຈຫຼາຍ ຈົນເຮົາຢາກຮ້ອງໄຫ້ອອກມາ, ແຕ່ເຮົາກໍໄດ້ຍ່າງໃນເສັ້ນທາງນີ້ຈົນເຖິງມື້ນີ້. ເຮົາເຊື່ອວ່ານີ້ຄືເສັ້ນທາງທີ່ພຣະເຈົ້າໄດ້ນຳພາ, ສະນັ້ນ ເຮົາຈຶ່ງອົດກັ້ນກັບຄວາມທໍລະມານທັງໝົດ ແລະ ສືບຕໍ່ໄປຂ້າງໜ້າ. ຍ້ອນນີ້ຄືສິ່ງທີ່ພຣະເຈົ້າໄດ້ກຳນົດໄວ້, ແລ້ວຜູ້ໃດຈະສາມາດຫຼີບໜີຈາກມັນໄດ້? ເຮົາບໍ່ໄດ້ຮຽກຮ້ອງເພື່ອຮັບເອົາພອນໃດໆ; ສິ່ງດຽວທີ່ເຮົາຮຽກຮ້ອງກໍເພື່ອພຽງໃຫ້ເຮົາໄດ້ສາມາດຍ່າງໃນເສັ້ນທາງທີ່ເຮົາຄວນຍ່າງຕາມຄວາມປະສົງຂອງພຣະເຈົ້າ. ເຮົາບໍ່ສະແຫວງຫາເພື່ອຮຽນແບບຄົນອື່ນ ໂດຍຍ່າງໃນເສັ້ນທາງທີ່ພວກເຂົາຍ່າງ; ສິ່ງດຽວທີ່ເຮົາສະແຫວງຫາກໍເພື່ອພຽງໃຫ້ເຮົາໄດ້ບັນລຸຄວາມປະສົງຂອງເຮົາທີ່ຈະຍ່າງໃນເສັ້ນທາງຂອງເຮົາທີ່ໄດ້ກຳນົດໄວ້ຈົນເຖິງທີ່ສຸດ. ເຮົາບໍ່ໄດ້ຂໍຄວາມຊ່ວຍເຫຼືອຈາກຄົນອື່ນ; ເວົ້າຕາມກົງກໍຄື, ເຮົາບໍ່ສາມາດຊ່ວຍຄົນອື່ນເຊັ່ນກັນ. ເບິ່ງຄືກັບວ່າ ເຮົາອ່ອນໄຫວຫຼາຍໃນເລື່ອງນີ້. ເຮົາບໍ່ຮູ້ວ່າຄົນອື່ນຄິດແນວໃດ. ນີ້ກໍຍ້ອນເຮົາເຊື່ອຢູ່ສະເໝີວ່າ ລະດັບທີ່ບຸກຄົນໜຶ່ງຕ້ອງທົນທຸກ ແລະ ໄລຍະທາງທີ່ພວກເຂົາຕ້ອງຍ່າງໃນເສັ້ນທາງຂອງພວກເຂົາແມ່ນຖືກກຳນົດໄວ້ໂດຍພຣະເຈົ້າ ແລະ ບໍ່ມີຜູ້ໃດສາມາດຊ່ວຍໃຜໄດ້. ອ້າຍເອື້ອຍນ້ອງຂອງພວກເຮົາບາງຄົນທີ່ກະຕືລືລົ້ນອາດເວົ້າວ່າ ເຮົາປາສະຈາກຄວາມຮັກ, ແຕ່ນີ້ເປັນພຽງສິ່ງທີ່ເຮົາເຊື່ອ. ຜູ້ຄົນຍ່າງໃນເສັ້ນທາງຂອງພວກເຂົາໂດຍອາໄສການນຳພາຂອງພຣະເຈົ້າ ແລະ ເຮົາກໍເຊື່ອວ່າອ້າຍເອື້ອຍນ້ອງສ່ວນໃຫຍ່ຂອງເຮົາຈະເຂົ້າໃຈຫົວໃຈຂອງເຮົາ.

ເຮົາຍັງຫວັງວ່າ ພຣະເຈົ້າຈະສະໜອງແສງສະຫວ່າງຢ່າງໃຫຍ່ໃຫ້ແກ່ພວກເຮົາໃນດ້ານນີ້, ເພື່ອວ່າຄວາມຮັກຂອງພວກເຮົາຈະບໍລິສຸດຍິ່ງຂຶ້ນ ແລະ ມິດຕະພາບຂອງພວກເຮົາຈະລໍ້າຄ່າຍິ່ງຂຶ້ນ. ຂໍໃຫ້ພວກເຮົາຈົ່ງຢ່າສັບສົນໃນຫົວຂໍ້ນີ້, ພຽງແຕ່ຮັບເອົາຄວາມແຈ່ມແຈ້ງຫຼາຍຍິ່ງຂຶ້ນ, ເພື່ອວ່າຄວາມສຳພັນລະຫວ່າງບຸກຄົນອາດຖືກສ້າງຂຶ້ນບົນພື້ນຖານຂອງການນຳພາຂອງພຣະເຈົ້າ.

ພຣະເຈົ້າໄດ້ປະຕິບັດພາລະກິດໃນປະເທດຈີນແຜ່ນດິນໃຫຍ່ເປັນເວລາຫຼາຍປີ ແລະ ພຣະອົງໄດ້ຈ່າຍລາຄາຢ່າງແພງໃຫ້ກັບທຸກຄົນເພື່ອເຮັດໃຫ້ພວກເຮົາຢູ່ໄດ້ມາເຖິງທຸກມື້ນີ້. ເຮົາຄິດວ່າ ເພື່ອນຳພາທຸກຄົນໄປສູ່ເສັ້ນທາງທີ່ຖືກຕ້ອງ, ພາລະກິດນີ້ກໍຕ້ອງເລີ່ມຕົ້ນຈາກຈຸດອ່ອນທີ່ສຸດຂອງທຸກຄົນ; ມີແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະສາມາດຜ່ານຜ່າອຸປະສັກຂັ້ນທຳອິດ ແລະ ສືບຕໍ່ໄປຂ້າງໜ້າໄດ້. ແລ້ວນັ້ນບໍ່ດີກວ່າບໍ? ຊົນຊາດຈີນຖືກເສື່ອມຊາມເປັນເວລາຫຼາຍພັນປີ, ໄດ້ຢູ່ລອດຈົນເຖິງປັດຈຸບັນ, "ຈຸລະໂລກ" ທຸກຮູບແບບໄດ້ພັດທະນາໂດຍບໍ່ຢຸດຢັ້ງ, ແຜ່ລາມໄປທົ່ວທຸກແຫ່ງຄືກັບໂລກລະບາດ; ພຽງແຕ່ເບິ່ງຄວາມສຳພັນຂອງຜູ້ຄົນກໍພຽງພໍແລ້ວທີ່ຈະຮູ້ວ່າ ມີ "ເຊື້ອໂລກ" ຫຼາຍສໍ່າໃດທີ່ລີ້ຊ້ອນຢູ່ໃນຜູ້ຄົນ. ມັນຍາກທີ່ສຸດທີ່ພຣະເຈົ້າຈະພັດທະນາພາລະກິດຂອງພຣະອົງໃນພື້ນທີ່ດັ່ງກ່າວທີ່ຖືກປິດຢ່າງໜາແໜ້ນ ແລະ ຕິດເຊື້ອຈຸລະໂລກ. ບຸກຄະລິກຂອງຜູ້ຄົນ, ນິໄສ, ວິທີທາງທີ່ພວກເຂົາເຮັດສິ່ງຕ່າງໆ, ທຸກສິ່ງທີ່ພວກເຂົາສະແດງອອກໃນຊີວິດຂອງພວກເຂົາ ແລະ ຄວາມສຳພັນລະຫວ່າງບຸກຄົນຂອງພວກເຂົາ, ພວກມັນຖືກທຳລາຍທັງໝົດ, ຈົນເຖິງຈຸດທີ່ຄວາມຮູ້ ແລະ ວັດທະນະທຳຂອງມະນຸດແມ່ນລ້ວນແລ້ວແຕ່ຖືກພຣະເຈົ້າປະນາມໃຫ້ຕາຍ. ນີ້ຍັງບໍ່ໄດ້ກ່າວເຖິງປະສົບການຕ່າງໆທີ່ພວກເຂົາໄດ້ຮຽນຮູ້ຈາກຄອບຄົວ ແລະ ສັງຄົມຂອງພວກເຂົາ, ສິ່ງເຫຼົ່ານີ້ກໍລ້ວນແລ້ວແຕ່ຖືກຕັດສິນວ່າຜິດໃນສາຍຕາຂອງພຣະເຈົ້າ. ນີ້ກໍຍ້ອນຄົນທີ່ດຳລົງຊີວິດໃນດິນແດນແຫ່ງນີ້ໄດ້ກືນກິນຈຸລະໂລກຫຼາຍເກີນໄປ. ມັນເປັນຄືຊີວິດປົກກະຕິສຳລັບພວກເຂົາ, ພວກເຂົາບໍ່ໄດ້ຄິດຫຍັງຫຼາຍກ່ຽວກັບມັນ. ສະນັ້ນ ຍິ່ງຜູ້ຄົນທີ່ເສື່ອມຊາມຢູ່ໃນສະຖານທີ່ໃດໜຶ່ງຫຼາຍສໍ່າໃດ, ຄວາມສຳພັນລະຫວ່າງບຸກຄົນຂອງພວກເຂົາກໍຍິ່ງບໍ່ປົກກະຕິຫຼາຍສໍ່ານັ້ນ. ຄວາມສຳພັນຂອງຜູ້ຄົນແມ່ນເຕັມໄປດ້ວຍກົນອຸບາຍ, ພວກເຂົາວາງແຜນປອງຮ້າຍກັນເອງ ແລະ ຂ້າກັນເອງ ຄືກັບຢູ່ໃນປ້ອມປາການບາງຢ່າງຂອງຜີຮ້າຍທີ່ກິນກັນເອງ. ໃນສະຖານທີ່ດັ່ງກ່າວທີ່ເຕັມໄປດ້ວຍຄວາມຢ້ານ, ບ່ອນທີ່ຜີຮ້າຍແລ່ນໄປມາຢ່າງແຜ່ຫຼາຍ, ມັນຍາກທີ່ສຸດທີ່ຈະປະຕິບັດພາລະກິດຂອງພຣະເຈົ້າ. ເຮົາອະທິຖານຫາພຣະເຈົ້າໂດຍບໍ່ຢຸດເຊົາ ເມື່ອເຮົາຕ້ອງພົບກັບຜູ້ຄົນ, ຍ້ອນເຮົາຢ້ານຫຼາຍທີ່ຈະພົບກັບພວກເຂົາ ແລະ ຢ້ານຢູ່ເລິກໆວ່າເຮົາຈະລ່ວງເກີນ "ສັກສີ" ຂອງພວກເຂົາດ້ວຍອຸປະນິໄສຂອງເຮົາ. ໃນຫົວໃຈຂອງເຮົາ, ເຮົາຍິ່ງຢ້ານວ່າວິນຍານທີ່ສົກກະປົກເຫຼົ່ານີ້ຈະປະພຶດໄປທົ່ວທິບ, ສະນັ້ນ ເຮົາຈຶ່ງອະທິຖານຫາພຣະເຈົ້າໃຫ້ປົກປ້ອງເຮົາຢູ່ສະເໝີ. ທຸກຮູບແບບຂອງຄວາມສຳພັນທີ່ບໍ່ປົກກະຕິແມ່ນຊັດແຈ້ງໃນທ່າມກາງພວກເຮົາ ແລະ ເມື່ອເຫັນທຸກສິ່ງນີ້ແລ້ວ ເຮົາກໍມີຄວາມກຽດຊັງໃນຫົວໃຈຂອງເຮົາຫຼາຍ, ຍ້ອນວ່າ ໃນທ່າມກາງພວກເຂົາ, ຜູ້ຄົນປະກອບສ່ວນໃນ "ທຸລະກິດ" ຂອງມະນຸດ ແລະ ບໍ່ເຄີຍສຳຮອງຄວາມຄິດໃດໄວ້ໃຫ້ກັບພຣະເຈົ້າ. ເຮົາກຽດຊັງພຶດຕິກຳຂອງພວກເຂົາຈົນເຂົ້າກະດູກດຳຂອງເຮົາ. ສິ່ງທີ່ສາມາດເຫັນໄດ້ໃນປະຊາຊົນໃນປະເທດຈີນແຜ່ນດິນໃຫຍ່ບໍ່ໄດ້ມີຫຍັງ ນອກຈາກອຸປະນິໄສທີ່ເສື່ອມຊາມຂອງຊາຕານ, ສະນັ້ນໃນ

ພາລະກິດຂອງພຣະເຈົ້າທີ່ຢູ່ໃນຄົນເຫຼົ່ານີ້, ມັນຈຶ່ງເກືອບຈະບໍ່ຄົ້ນພົບສິ່ງມີຄ່າໃຫ້ເຫັນໃນພວກເຂົາ; ພາລະກິດທັງໝົດແມ່ນຖືກປະຕິບັດໂດຍພຣະວິນຍານບໍລິສຸດ ແລະ ມັນເປັນພຽງພຣະວິນຍານບໍລິສຸດທີ່ດົນບັນດານຜູ້ຄົນຍິ່ງຂຶ້ນ ແລະ ປະຕິບັດພາລະກິດໃນພວກເຂົາ. ມັນເກືອບເປັນໄປບໍ່ໄດ້ທີ່ຈະໃຊ້ຜູ້ຄົນເຫຼົ່ານັ້ນໃຫ້ເກີດປະໂຫຍດ; ນັ້ນກໍຄື ພາລະກິດທີ່ພຣະວິນຍານບໍລິສຸດດົນບັນດານຜູ້ຄົນ ປະກອບກັບການຮ່ວມມືຂອງຜູ້ຄົນຈຶ່ງບໍ່ສາມາດຖືກປະຕິບັດໄດ້. ພຣະວິນຍານບໍລິສຸດພຽງແຕ່ຍ່າງໜີເພື່ອດົນບັນດານຜູ້ຄົນ, ແຕ່ເຖິງຢ່າງນັ້ນກໍຕາມ, ຜູ້ຄົນກໍຍັງບໍ່ມີຄວາມຮູ້ສຶກ ແລະ ໄຮ້ຄວາມປານີ ແລະ ຄິດບໍ່ອອກວ່າພຣະເຈົ້າກຳລັງເຮັດຫຍັງຢູ່. ສະນັ້ນ ພາລະກິດຂອງພຣະເຈົ້າໃນປະເທດຈີນແຜ່ນດິນໃຫຍ່ຈຶ່ງສາມາດປຽບທຽບໄດ້ກັບພາລະກິດຂອງພຣະອົງໃນການສ້າງສະຫວັນ ແລະ ແຜ່ນດິນໂລກ. ພຣະອົງເຮັດໃຫ້ທຸກຄົນເກີດອີກຄັ້ງ ແລະ ປ່ຽນແປງທຸກຢ່າງກ່ຽວກັບພວກເຂົາ, ຍ້ອນບໍ່ມີຫຍັງທີ່ຄຸ້ມຄ່າພາຍໃນພວກເຂົາ. ມັນສະເທືອນໃຈຫຼາຍ. ເຮົາອະທິຖານດ້ວຍຄວາມໂສກເສົ້າສຳລັບຜູ້ຄົນເຫຼົ່ານີ້ຢູ່ສະເໝີວ່າ: “ພຣະເຈົ້າ, ຂໍໃຫ້ລິດອຳນາດອັນຍິ່ງໃຫຍ່ຂອງພຣະອົງຖືກເປີດເຜີຍໃນຜູ້ຄົນເຫຼົ່ານີ້, ເພື່ອວ່າພຣະວິນຍານຂອງພຣະອົງຈະໄດ້ດົນບັນດານພວກເຂົາຢ່າງຫຼາຍ ແລະ ເພື່ອວ່າຜູ້ທີ່ໄຮ້ຄວາມຮູ້ສຶກ ແລະ ໂງ່ຈ້າເຫຼົ່ານີ້ຈະຕື່ນຂຶ້ນ, ບໍ່ນອນຫຼັບຢ່າງງ່ວງເຫງົາອີກຕໍ່ໄປ ແລະ ເຫັນມື້ແຫ່ງສະຫງ່າລາສີຂອງພຣະອົງ”. ຂໍໃຫ້ພວກເຮົາທຸກຄົນອະທິຖານຕໍ່ໜ້າພຣະເຈົ້າ ແລະ ກ່າວວ່າ: ໂອ ພຣະເຈົ້າ! ຂໍໃຫ້ພຣະອົງເມດຕາ ແລະ ເບິ່ງແຍງພວກຂ້ານ້ອຍອີກຄັ້ງ ເພື່ອວ່າຫົວໃຈຂອງພວກຂ້ານ້ອຍຈະສາມາດຫັນເຂົ້າຫາພຣະອົງໄດ້ຢ່າງສົມບູນ ແລະ ເພື່ອວ່າພວກຂ້ານ້ອຍຈະສາມາດໜີອອກຈາກດິນແດນທີ່ສົກກະປົກນີ້, ຢືນຂຶ້ນ ແລະ ເຮັດໃຫ້ສິ່ງທີ່ພຣະອົງໄດ້ຝາກຝັງກັບພວກຂ້ານ້ອຍສຳເລັດ. ເຮົາຫວັງວ່າພຣະເຈົ້າຈະດົນບັນດານພວກເຮົາອີກຄັ້ງ ເພື່ອວ່າພວກເຮົາຈະໄດ້ຮັບແສງສະຫວ່າງຂອງພຣະອົງ ແລະ ເຮົາຫວັງວ່າພຣະອົງອາດມີຄວາມເມດຕາຕໍ່ພວກເຮົາ ເພື່ອວ່າຫົວໃຈຂອງພວກເຮົາຈະສາມາດຫັນເຂົ້າຫາພຣະອົງເທື່ອລະໜ້ອຍ ແລະ ພຣະອົງຈະໄດ້ຮັບເອົາພວກເຮົາ. ນີ້ຄືຄວາມປາຖະໜາທີ່ພວກເຮົາທຸກຄົນມີຮ່ວມກັນ.

ເສັ້ນທາງທີ່ພວກເຮົາຍ່າງແມ່ນຖືກກຳນົດໄວ້ໂດຍພຣະເຈົ້າທັງສິ້ນ. ສະຫຼຸບກໍຄື ເຮົາເຊື່ອວ່າ ເຮົາຈະຍ່າງໃນເສັ້ນທາງນີ້ຈົນເຖິງທີ່ສຸດຢ່າງແນ່ນອນ, ຍ້ອນພຣະເຈົ້າຍິ້ມໃສ່ເຮົາຢູ່ສະເໝີ ແລະ ມັນຄືກັບວ່າເຮົາຖືກນຳພາໂດຍມືຂອງພຣະອົງ. ສະນັ້ນ ຫົວໃຈຂອງເຮົາຈຶ່ງບໍ່ມີມົນທິນຈາກສິ່ງໃດເລີຍ ແລະ ສະນັ້ນ ເຮົາຈຶ່ງເອົາໃສ່ໃຈໃນພາລະກິດຂອງພຣະເຈົ້າ. ເຮົາປະຕິບັດທຸກສິ່ງທີ່ພຣະເຈົ້າໄດ້ຝາກຝັງໄວ້ໃຫ້ກັບເຮົາ ດ້ວຍກຳລັງ ແລະ ການອຸທິດທັງໝົດຂອງເຮົາ ແລະ ເຮົາບໍ່ເຄີຍແຊກແຊງໃນໜ້າທີ່ທີ່ບໍ່ໄດ້ມອບໝາຍໃຫ້ແກ່ເຮົາ ຫຼື ເຮົາບໍ່ໄດ້ເຮັດໃຫ້ຕົນເອງພົວພັນກັບຜູ້ອື່ນທີ່ເຮັດໜ້າທີ່ນັ້ນ, ຍ້ອນເຮົາເຊື່ອວ່າ ແຕ່ລະຄົນຕ້ອງຍ່າງໃນເສັ້ນທາງຂອງພວກເຂົາເອງ ແລະ ບໍ່ລ່ວງລ້ຳຄົນອື່ນ. ນັ້ນແມ່ນວິທີທີ່ເຮົາເຂົ້າໃຈມັນ. ບາງເທື່ອ ນີ້ເປັນຍ້ອນບຸກຄະລິກຂອງເຮົາເອງ, ແຕ່ເຮົາຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາຈະເຂົ້າໃຈ ແລະ ໃຫ້ອະໄພເຮົາ ຍ້ອນເຮົາບໍ່ກ້າຕໍ່ຕ້ານບົດບັນຍັດຂອງພຣະບິດາຂອງເຮົາຈັກເທື່ອ. ເຮົາບໍ່ກ້າຂັດຂືນຄວາມປະສົງຂອງສະຫວັນ. ເຈົ້າລືມແລ້ວບໍວ່າ “ຄວາມປະສົງຂອງສະຫວັນບໍ່ສາມາດຖືກຂັດຂືນໄດ້”? ບາງຄົນຄິດວ່າເຮົາເປັນຄົນເຫັນແກ່ຕົວ, ແຕ່ເຮົາເຊື່ອວ່າ ເຮົາໄດ້ມາເພື່ອປະຕິບັດສ່ວນ

ໜຶ່ງຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າໂດຍສະເພາະ. ເຮົາບໍ່ໄດ້ມາເພື່ອມີສ່ວນຮ່ວມໃນຄວາມສຳພັນລະຫວ່າງບຸກຄົນ; ເຮົາຈະບໍ່ຮຽນຮູ້ວິທີເພື່ອເຂົ້າກັບຄົນອື່ນໄດ້. ເຖິງຢ່າງໃດກໍຕາມ, ໃນການຝາກຝັງຂອງພຣະເຈົ້າ ເຮົາມີການນຳພາຂອງພຣະເຈົ້າ ແລະ ເຮົາມີຄວາມເຊື່ອ ແລະ ຄວາມເດັດດ່ຽວເພື່ອສືບຕໍ່ປະຕິບັດພາລະກິດນີ້ໃຫ້ສຳເລັດ. ບາງເທື່ອເຮົາ "ເຫັນແກ່ຕົວ" ເກີນໄປ, ແຕ່ເຮົາຫວັງວ່າທຸກຄົນຈະພະຍາຍາມຮູ້ສຶກເຖິງຄວາມຮັກທີ່ຍຸຕິທຳ ແລະ ບໍ່ເຫັນແກ່ຕົວຂອງພຣະເຈົ້າ ແລະ ພະຍາຍາມຮ່ວມມືກັບພຣະເຈົ້າ. ຢ່າລໍຖ້າການມາເຖິງຄັ້ງທີສອງຂອງຂອງຄວາມສະຫງ່າຜ່າເຜີຍຂອງພຣະເຈົ້າ; ນັ້ນບໍ່ເປັນຜົນດີກັບໃຜເລີຍ. ເຮົາຄິດຢູ່ສະເໝີວ່າ ສິ່ງທີ່ພວກເຮົາຄວນພິຈາລະນາກໍຄືສິ່ງນີ້: "ພວກເຮົາຕ້ອງເຮັດທຸກສິ່ງທີ່ສາມາດເຮັດໄດ້ເພື່ອປະຕິບັດສິ່ງທີ່ພວກເຮົາຄວນເຮັດເພື່ອໃຫ້ພຣະເຈົ້າພໍໃຈ. ການຝາກຝັງຂອງພຣະເຈົ້າສຳລັບພວກເຮົາແຕ່ລະຄົນແມ່ນແຕກຕ່າງກັນ; ແລ້ວພວກເຮົາຄວນສຳເລັດມັນແນວໃດ?" ເຈົ້າຕ້ອງຮັບຮູ້ວ່າ ເຈົ້າຍ່າງໃນເສັ້ນທາງໃດກັນແທ້, ມັນຈຳເປັນທີ່ເຈົ້າຕ້ອງເຂົ້າໃຈຢ່າງຊັດເຈນກ່ຽວກັບສິ່ງນີ້. ຍ້ອນພວກເຈົ້າທຸກຄົນປາຖະໜາທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ, ເປັນຫຍັງຈຶ່ງບໍ່ມອບຖວາຍຕົນເອງໃຫ້ກັບພຣະອົງ? ຄັ້ງທຳອິດທີ່ເຮົາອະທິຖານຫາພຣະເຈົ້າ, ເຮົາມອບຫົວໃຈທັງໝົດຂອງເຮົາໃຫ້ແກ່ພຣະອົງ. ຜູ້ຄົນທີ່ຢູ່ອ້ອມຂ້າງເຮົາ, ພໍ່ແມ່, ເອື້ອຍນ້ອງ, ອ້າຍນ້ອງ ແລະ ເພື່ອນຮ່ວມງານ, ພວກເຂົາທຸກຄົນບໍ່ໄດ້ຢູ່ໃນຄວາມຄິດຂອງເຮົາ ເພາະວ່າເຮົາພຽງຕັ້ງໝັ້ນກັບພຣະເຈົ້າເທົ່ານັ້ນ, ມັນເປັນຄືກັບວ່າພວກເຂົາບໍ່ໄດ້ມີຢູ່ສຳລັບເຮົາເລີຍ. ຍ້ອນຄວາມຄິດຂອງເຮົາຢູ່ທີ່ພຣະເຈົ້າຢູ່ສະເໝີ ຫຼື ພຣະທຳຂອງພຣະເຈົ້າ ຫຼື ສະຕິປັນຍາຂອງພຣະອົງ; ສິ່ງເຫຼົ່ານີ້ຢູ່ໃນຫົວໃຈຂອງເຮົາຢູ່ສະເໝີ ແລະ ສິ່ງເຫຼົ່ານັ້ນໄດ້ຢູ່ບ່ອນທີ່ລ້ຳຄ່າທີ່ສຸດໃນຫົວໃຈຂອງເຮົາ. ສະນັ້ນ ສຳລັບຜູ້ຄົນທີ່ເຕັມໄປດ້ວຍປັດຊະຍາໃນການດຳລົງຊີວິດ, ເຮົາເປັນຄົນທີ່ເລືອດເຢັນ ແລະ ບໍ່ມີຄວາມຮູ້ສຶກຫຍັງໝົດ. ຫົວໃຈຂອງພວກເຂົາເຈັບປວດດ້ວຍວິທີທີ່ເຮົາວາງຕົວເອງ, ດ້ວຍວິທີທີ່ເຮົາເຮັດສິ່ງຕ່າງໆ ແລະ ທຸກການເຄື່ອນໄຫວຂອງເຮົາ. ພວກເຂົາທອດສາຍຕາເບິ່ງເຮົາແບບແປກໃຈ, ຄືກັບວ່າຕົວຕົນທີ່ເຮົາເປັນແມ່ນປິດສະໜາທີ່ບໍ່ສາມາດແກ້ໄດ້. ໃນຄວາມຄິດຂອງພວກເຂົາ, ພວກເຂົາກຳລັງວັດແທກຕົວຕົນທີ່ເຮົາເປັນຢ່າງລັບໆ ໂດຍບໍ່ຮູ້ວ່າເຮົາຈະເຮັດຫຍັງຕໍ່ໄປ. ສິ່ງທີ່ພວກເຂົາເຮັດຈະສາມາດຂວາງທາງຂອງເຮົາໄດ້ແນວໃດ? ບາງເທື່ອ ພວກເຂົາອິດສາ ຫຼື ເບື່ອໜ່າຍ ຫຼື ເຍາະເຍີ້ຍ; ຢ່າງໃດກໍຕາມ, ເຮົາອະທິຖານຕໍ່ໜ້າພຣະເຈົ້າຕະຫຼອດເວລາ ຄືກັບວ່າເຮົາຫິວ ແລະ ກະຫາຍຫຼາຍ, ຄືກັບວ່າມີພຽງເຮົາ ແລະ ພຣະອົງຢູ່ໃນໂລກດຽວກັນ ແລະ ບໍ່ມີຄົນອື່ນຢູ່ເລີຍ. ອຳນາດໂລກພາຍນອກອ້ອມລ້ອມເຮົາຢ່າງແໜ້ນໜາ, ແຕ່ຄວາມຮູ້ສຶກຖືກດົນບັນດານໂດຍພຣະເຈົ້າກໍຊັດສາດຢູ່ພາຍໃນເຮົາເຊັ່ນກັນ. ເມື່ອຕົກຢູ່ໃນສະພາວະລຳບາກນີ້, ເຮົາກໍກົ້ມຂາບລົງຕໍ່ໜ້າພຣະເຈົ້າ: "ໂອ ພຣະເຈົ້າ! ຂ້ານ້ອຍຈະບໍ່ເຕັມໃຈຕໍ່ຄວາມປະສົງຂອງພຣະອົງແນວໃດ? ຕາຂອງພຣະອົງເຝົ້າເບິ່ງຂ້ານ້ອຍຢ່າງມີກຽດ, ດັ່ງທອງຄຳທີ່ປານິດ, ແຕ່ຂ້ານ້ອຍກໍບໍ່ສາມາດຫຼົບໜີຈາກອຳນາດແຫ່ງຄວາມມືດ. ຂ້ານ້ອຍຈະທົນທຸກເພື່ອພຣະອົງຕະຫຼອດຊີວິດຂອງຂ້ານ້ອຍ, ຂ້ານ້ອຍຈະເຮັດໃຫ້ພາລະກິດຂອງພຣະອົງເປັນອາຊີບໃນຊີວິດຂອງຂ້ານ້ອຍ ແລະ ຂ້ານ້ອຍຂໍໃຫ້ພຣະອົງມອບສະຖານທີ່ພັກຜ່ອນທີ່ເໝາະສົມໃຫ້ແກ່ຂ້ານ້ອຍເພື່ອອຸທິດຕົນເອງໃຫ້ກັບພຣະອົງ. ໂອ ພຣະເຈົ້າ! ຂ້ານ້ອຍປາຖະໜາທີ່ຈະ

ມອບຖວາຍຕົນເອງໃຫ້ກັບພຣະອົງ. ພຣະອົງຮູ້ຈັກຈຸດອ່ອນຂອງມະນຸດເປັນຢ່າງດີ, ແລ້ວເປັນຫຍັງພຣະອົງຈຶ່ງປິດບັງຕົນເອງຈາກຂ້ານ້ອຍ?" ທັນທີໃດ, ມັນຄືກັບວ່າເຮົາເປັນດອກລີລີ້ເທິງພູເຂົາ, ກິ່ນຫອມຂອງມັນຖືກລົມອ່ອນພັດໄປມາ ໂດຍທີ່ທຸກຄົນບໍ່ຮູ້ຈັກ. ເຖິງແມ່ນສະຫວັນຈະສະອື້ນ ແລະ ຫົວໃຈຂອງເຮົາຮ້ອງໄຫ້, ມັນຮູ້ສຶກຄືກັບວ່າ ຫົວໃຈຂອງເຮົາເຈັບປວດຫຼາຍທີ່ສຸດ. ອຳນາດທັງໝົດ ແລະ ການອ້ອມລ້ອມມະນຸດ, ພວກມັນເປັນຄືກັບຟ້າຮ້ອງໃນມື້ທີ່ແຈ່ມໃສ. ຜູ້ໃດຈະສາມາດເຂົ້າໃຈຫົວໃຈຂອງເຮົາໄດ້? ແລ້ວສະນັ້ນ ເຮົາຈຶ່ງມາຢູ່ຕໍ່ໜ້າພຣະເຈົ້າອີກຄັ້ງ ແລະ ເວົ້າວ່າ "ໂອ ພຣະເຈົ້າ! ບໍ່ມີວິທີທີ່ຈະປະຕິບັດພາລະກິດຂອງພຣະອົງໃນດິນແດນທີ່ສົກກະປົກນີ້ບໍ? ເປັນຫຍັງຄົນອື່ນຈຶ່ງບໍ່ສາມາດເອົາໃສ່ໃຈກັບຫົວໃຈຂອງພຣະອົງໃນສະພາບແວດລ້ອມທີ່ສະດວກສະບາຍ ແລະ ສະໜັບສະໜູນ ເຊິ່ງປາສະຈາກການຂົ່ມເຫັງ? ຂ້ານ້ອຍຕ້ອງການກາງປີກຂອງຂ້ານ້ອຍອອກ, ແຕ່ເປັນຫຍັງມັນຈຶ່ງຍາກຫຼາຍທີ່ຈະບິນໜີ? ພຣະອົງບໍ່ເຫັນດີເຫັນພ້ອມບໍ?" ເປັນເວລາຫຼາຍມື້ ເຮົາໄດ້ຮ້ອງໄຫ້ນຳສິ່ງນີ້, ແຕ່ເຮົາກໍເຊື່ອໃຈຢູ່ສະເໝີວ່າພຣະເຈົ້າຈະນຳການປອບໂຍນມາສູ່ຫົວໃຈທີ່ໂສກເສົ້າຂອງເຮົາ. ບໍ່ມີຜູ້ໃດເຄີຍເຂົ້າໃຈຄວາມກະວົນກະວາຍຂອງເຮົາ. ບາງເທື່ອ ມັນເປັນການຮັບຮູ້ໂດຍກົງຈາກພຣະເຈົ້າ, ເຮົາຈຶ່ງມີໄຟໃນຕົວເຮົາສຳລັບພາລະກິດຂອງພຣະອົງຢູ່ສະເໝີ ແລະ ເກືອບບໍ່ມີເວລາທີ່ຈະຫາຍໃຈເລີຍ. ຈົນເຖິງປັດຈຸບັນ, ເຮົາຍັງອະທິຖານ ແລະ ເວົ້າວ່າ "ໂອ ພຣະເຈົ້າ! ຖ້າມັນຄືຄວາມປະສົງຂອງພຣະອົງ, ຂໍໃຫ້ພຣະອົງນຳພາຂ້ານ້ອຍໃຫ້ປະຕິບັດພາລະກິດທີ່ຍິ່ງໃຫຍ່ກວ່າເກົ່າຂອງພຣະອົງ ເພື່ອວ່າມັນຈະໄດ້ແຜ່ຂະຫຍາຍໄປທົ່ວຈັກກະວານ ແລະ ມັນຈະເປີດເຜີຍຕໍ່ທຸກຊົນຊາດ ແລະ ທຸກນິກາຍ, ເພື່ອວ່າສັນຕິສຸກເລັກນ້ອຍຈະຖືກນຳມາສູ່ຫົວໃຈຂອງຂ້ານ້ອຍ ແລະ ດ້ວຍເຫດນັ້ນ ຂ້ານ້ອຍຈຶ່ງຈະດຳລົງຊີວິດຢູ່ໃນສະຖານທີ່ພັກຜ່ອນສຳລັບພຣະອົງ ແລະ ຂ້ານ້ອຍຈຶ່ງຈະປະຕິບັດພາລະກິດສຳລັບພຣະອົງ ໂດຍບໍ່ມີການແຊກແຊງ ແລະ ສາມາດຮັບໃຊ້ພຣະອົງຢ່າງສັນຕິສຸກຕະຫຼອດຊີວິດຂອງຂ້ານ້ອຍ". ນີ້ຄືຄວາມປາຖະໜາໃນຫົວໃຈຂອງເຮົາ. ບາງເທື່ອ ອ້າຍເອື້ອຍນ້ອງຈະເວົ້າວ່າເຮົາອວດດີ ແລະ ທະນົງຕົວ; ເຮົາຮັບຮູ້ເຖິງສິ່ງນີ້ເຊັ່ນກັນ, ຍ້ອນມັນຄືຂໍ້ແທ້ຈິງ, ສິ່ງທີ່ຄົນໜຸ່ມມີກໍເປັນພຽງຄວາມອວດດີ. ສະນັ້ນ ເຮົາຈຶ່ງເວົ້າຕາມທີ່ເຮົາເຫັນວ່າເປັນຈິງໂດຍບໍ່ມີຂໍ້ຂັດແຍ້ງໃດໆ. ໃນຕົວເຮົາ ເຈົ້າອາດຈະເຫັນບຸກຄະລິກທັງໝົດຂອງຄົນໜຸ່ມ, ແຕ່ເຈົ້າຍັງຈະສາມາດເຫັນວ່າເຮົາແຕກຕ່າງຈາກຄົນໜຸ່ມຄົນອື່ນໆ ເຊັ່ນ: ຄວາມສະຫງົບ ແລະ ຄວາມມິດງຽບຂອງເຮົາ. ເຮົາຈະບໍ່ເຮັດສິ່ງນີ້ໃຫ້ເປັນເລື່ອງໃຫຍ່; ເຮົາເຊື່ອວ່າພຣະເຈົ້າຮູ້ຈັກເຮົາດີກວ່າທີ່ເຮົາຮູ້ຈັກຕົນເອງ. ສິ່ງເຫຼົ່ານີ້ແມ່ນພຣະທຳຈາກຫົວໃຈຂອງເຮົາ ແລະ ເຮົາຫວັງວ່າອ້າຍເອື້ອຍນ້ອງຈະບໍ່ໂກດເຄືອງ. ຂໍໃຫ້ພວກເຮົາເວົ້າອອກຈາກຫົວໃຈຂອງພວກເຮົາ, ເບິ່ງສິ່ງທີ່ພວກເຮົາແຕ່ລະຄົນສະແຫວງຫາ, ປຽບທຽບຫົວໃຈແຫ່ງຄວາມຮັກຂອງພວກເຮົາສຳລັບພຣະເຈົ້າ, ຟັງຄຳເວົ້າທີ່ພວກເຮົາສົ່ງໃສ່ພຣະເຈົ້າ, ຮ້ອງບົດເພງທີ່ສວຍງາມທີ່ສຸດໃນຫົວໃຈຂອງພວກເຮົາ ແລະ ສະແດງເຖິງຄວາມພາກພູມໃຈທີ່ຢູ່ໃນຫົວໃຈຂອງພວກເຮົາ, ເພື່ອວ່າຊີວິດຂອງພວກເຮົາຈະສວຍງາມຍິ່ງຂຶ້ນ. ໃຫ້ລືມອະດີດ ແລະ ຫຼຽວເບິ່ງໃນອະນາຄົດ. ພຣະເຈົ້າຈະເປີດເສັ້ນທາງອອກໃຫ້ແກ່ພວກເຮົາ!

# ເສັ້ນທາງ... (7)

ໃນປະສົບການຕົວຈິງຂອງພວກເຮົາ, ພວກເຮົາໄດ້ເຫັນວ່າມີຫຼາຍຄັ້ງທີ່ພຣະເຈົ້າໄດ້ເປີດເສັ້ນທາງອອກໃຫ້ແກ່ພວກເຮົາດ້ວຍຕົວພຣະອົງເອງ, ເພື່ອວ່າເສັ້ນທາງທີ່ພວກເຮົາຍ່າງຈະໝັ້ນຄົງຍິ່ງຂຶ້ນ ແລະ ເປັນຈິງຍິ່ງຂຶ້ນ. ຍ້ອນນີ້ແມ່ນເສັ້ນທາງທີ່ພຣະເຈົ້າໄດ້ເປີດອອກໃຫ້ແກ່ພວກເຮົາຕັ້ງແຕ່ດົນນານມາແລ້ວ ແລະ ຖືກສົ່ງຕໍ່ສູ່ຮຸ່ນຂອງພວກເຮົາຫຼັງຈາກຫຼາຍສິບພັນປີ. ສະນັ້ນ ພວກເຮົາຈຶ່ງໄດ້ຍ່າງໃນເສັ້ນທາງຂອງບັນພະບຸລຸດຂອງພວກເຮົາ ຜູ້ເຊິ່ງບໍ່ໄດ້ຍ່າງໃນເສັ້ນທາງນັ້ນຈົນເຖິງທີ່ສຸດ. ພວກເຮົາໄດ້ຖືກເລືອກໂດຍພຣະເຈົ້າໃຫ້ຍ່າງໃນຂັ້ນຕອນສຸດທ້າຍຂອງເສັ້ນທາງ. ດ້ວຍເຫດນັ້ນ ເສັ້ນທາງນີ້ຈຶ່ງຖືກພຣະເຈົ້າຈັດຕຽມໃຫ້ແກ່ພວກເຮົາເປັນພິເສດ ແລະ ບໍ່ວ່າພວກເຮົາຈະໄດ້ຮັບພອນ ຫຼື ທົນທຸກຢູ່ກັບຄວາມໂຊກຮ້າຍກໍຕາມ, ບໍ່ມີຜູ້ໃດທີ່ສາມາດຍ່າງໃນເສັ້ນທາງນີ້. ໃຫ້ເຮົາເພີ່ມຄວາມເຂົ້າໃຈຂອງເຮົາເອງໃສ່ໃນສິ່ງນີ້: ຢ່າຄິດທີ່ຈະພະຍາຍາມໜີໄປບ່ອນອື່ນ ຫຼື ພະຍາຍາມທີ່ຈະຄົ້ນຫາເສັ້ນທາງອື່ນ ແລະ ຢ່າປາຖະໜາຢາກໄດ້ສະຖານະ ຫຼື ພະຍາຍາມສ້າງຕັ້ງອານາຈັກຂອງເຈົ້າເອງ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຄວາມເພີ້ຝັນ. ເຈົ້າອາດມີແນວຄິດໃດໜຶ່ງທີ່ໄດ້ຄິດໄວ້ກ່ອນລ່ວງໜ້າກ່ຽວກັບພຣະທຳຂອງເຮົາເຊິ່ງໃນກໍລະນີນີ້ ເຮົາແນະນຳໃຫ້ເຈົ້າເຊົາສັບສົນ. ມັນຈະດີກວ່າຖ້າເຈົ້າໃສ່ໃຈໃນສິ່ງນີ້ຫຼາຍຂຶ້ນ; ຢ່າພະຍາຍາມເຮັດເປັນສະຫຼາດ ແລະ ຢ່າສັບສົນລະຫວ່າງຄວາມດີ ແລະ ຄວາມຊົ່ວ. ເຈົ້າຈະເສຍໃຈຫຼັງຈາກທີ່ແຜນການຂອງພຣະເຈົ້າໄດ້ສຳເລັດແລ້ວ. ສິ່ງທີ່ເຮົາກຳລັງໝາຍເຖິງກໍຄື ເມື່ອອານາຈັກຂອງພຣະເຈົ້າໄດ້ມາເຖິງ, ທຸກຊາດເທິງແຜ່ນດິນໂລກຈະຖືກຕີໃຫ້ແຕກມຸ່ນເປັນເສດສ່ວນນ້ອຍໆ. ໃນເວລານັ້ນ ເຈົ້າຈະໄດ້ເຫັນວ່າ ແຜນການຂອງເຈົ້າເອງແມ່ນໄດ້ຖືກທຳລາຍລ້າງເຊັ່ນກັນ ແລະ ຄົນທີ່ຖືກຂ້ຽນຕີກໍຈະຖືກຟາດຕີ ແລະ ໃນນີ້ ພຣະເຈົ້າຈະສະແດງໃຫ້ເຫັນອຸປະນິໄສຂອງພຣະອົງຢ່າງສົມບູນ. ເຮົາຄິດວ່າ ຍ້ອນສິ່ງເຫຼົ່ານີ້ຊັດເຈນສຳລັບເຮົາຫຼາຍ, ເຮົາຈຶ່ງຄວນບອກສິ່ງເຫຼົ່ານີ້ໃຫ້ແກ່ເຈົ້າ, ເພື່ອເຈົ້າຈະບໍ່ກ່າວໂທດເຮົາຫຼັງຈາກນັ້ນ. ການທີ່ພວກເຮົາສາມາດຍ່າງໃນເສັ້ນທາງນີ້ຈົນເຖິງປັດຈຸບັນແມ່ນຖືກກຳນົດໄວ້ໂດຍພຣະເຈົ້າແລ້ວ, ສະນັ້ນ ຢ່າຄິດວ່າເຈົ້າເປັນສິ່ງທີ່ພິເສດ ຫຼື ເຈົ້າໂຊກຮ້າຍ, ບໍ່ມີຜູ້ໃດສາມາດຢືນຢັນກ່ຽວກັບພາລະກິດໃນປັດຈຸບັນຂອງພຣະເຈົ້າ ເພາະຢ້ານເຈົ້າຖືກຕີໃຫ້ແຕກມຸ່ນເປັນເສດສ່ວນນ້ອຍໆ. ເຮົາໄດ້ຮັບແສງສະຫວ່າງໂດຍພາລະກິດຂອງພຣະເຈົ້າ: ບໍ່ວ່າຫຍັງກໍຕາມ, ພຣະເຈົ້າຈະເຮັດໃຫ້ຜູ້ຄົນກຸ່ມນີ້ບໍລິບູນ, ພາລະກິດຂອງພຣະອົງຈະບໍ່ປ່ຽນແປງອີກ ແລະ ພຣະອົງຈະພາຜູ້ຄົນກຸ່ມນີ້ໄປສູ່ປາຍທາງ ແລະ ສິ້ນສຸດພາລະກິດຂອງພຣະອົງເທິງແຜ່ນດິນໂລກ. ພວກເຮົາທຸກຄົນຄວນເຂົ້າໃຈກ່ຽວກັບສິ່ງນີ້. ຄົນສ່ວນໃຫຍ່ມັກຈະ "ເບິ່ງໄປທາງໜ້າ" ແລະ ບໍ່ມີຈຸດຈົບໃນຄວາມຫິວກະຫາຍຂອງພວກເຂົາ. ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ເຂົ້າໃຈຄວາມປະສົງອັນຮີບດ່ວນຂອງພຣະເຈົ້າໃນປັດຈຸບັນ ແລະ ດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງຄິດທີ່ຈະຫຼົບໜີ. ພວກເຂົາແລ່ນໜີຄືກັບມ້າທີ່ຕ້ອງການພຽງແລ່ນຕະລອນໃນຖິ່ນແຫ້ງແລ້ງກັນດານ; ມີໜ້ອຍຄົນທີ່ປາຖະໜາຈະປັກຫຼັກໃນດິນແດນການາອານທີ່ອຸດົມສົມບູນເພື່ອສະແຫວງຫາຫົນທາງແຫ່ງຊີວິດຂອງມະນຸດ. ເມື່ອໄດ້ເຂົ້າສູ່ດິນແດນທີ່ຫຼັ່ງໄຫຼໄປ

ດ້ວຍນໍ້ານົມ ແລະ ນໍ້າເຜິ້ງ, ຖ້າຜູ້ຄົນບໍ່ມີຄວາມສຸກກັບສິ່ງນັ້ນ, ແລ້ວພວກເຂົາຈະຕ້ອງການຫຍັງອີກ? ຄວາມຈິງກໍຄື, ນອກເໜືອຈາກດິນແດນການາອານທີ່ອຸດົມສົມບູນແລ້ວ ກໍມີພຽງແຕ່ຖິ່ນແຫ້ງແລ້ງກັນດານເທົ່ານັ້ນ. ເຖິງແມ່ນວ່າ ເມື່ອຜູ້ຄົນໄດ້ເຂົ້າສູ່ສະຖານທີ່ພັກຜ່ອນ, ພວກເຂົາກໍບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາໄດ້; ພວກເຂົາບໍ່ແມ່ນພຽງໂສເພນີບໍ? ຖ້າເຈົ້າສູນເສຍໂອກາດທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າໃນທີ່ນີ້, ເຈົ້າຈະເສຍດາຍມັນຕະຫຼອດຊີວິດຂອງເຈົ້າ, ຄວາມເສຍໃຈຂອງເຈົ້າຈະບໍ່ມີວັນສິ້ນສຸດ. ເຈົ້າຈະເປັນຄືກັບໂມເຊ ຜູ້ທີ່ຈ້ອງເບິ່ງດິນແດນການາອານ ແຕ່ບໍ່ສາມາດຊື່ນຊົມມັນໄດ້, ເພິ່ນໄດ້ແຕ່ກໍາກໍາປັ້ນ ແລະ ຕາຍໄປດ້ວຍຄວາມເສຍໃຈ, ເຈົ້າບໍ່ຄິດວ່າສິ່ງນີ້ເປັນຕາລະອາຍບໍ? ເຈົ້າບໍ່ຄິດວ່າມັນເປັນຕາອັບອາຍບໍທີ່ຖືກເຍາະເຍີ້ຍໂດຍຄົນອື່ນ? ເຈົ້າເຕັມໃຈທີ່ຈະຖືກຄົນອື່ນເຮັດໃຫ້ອັບອາຍບໍ? ເຈົ້າບໍ່ປາຖະໜາທີ່ຈະເຮັດດີສໍາລັບຕົນເອງບໍ? ເຈົ້າບໍ່ຕ້ອງການກາຍມາເປັນບຸກຄົນທີ່ມີກຽດ ແລະ ປະພຶດດີ ທີ່ຖືກພຣະເຈົ້າເຮັດໃຫ້ສົມບູນບໍ? ເຈົ້າປາຖະໜາຫາຄວາມວ່າງເປົ່າແທ້ບໍ? ເຈົ້າບໍ່ເຕັມໃຈທີ່ຈະຍ່າງໃນເສັ້ນທາງອື່ນ; ເຈົ້າຍັງບໍ່ປາຖະໜາທີ່ຈະຍ່າງໃນເສັ້ນທາງທີ່ພຣະເຈົ້າໄດ້ກໍານົດໄວ້ໃຫ້ແກ່ເຈົ້າບໍ? ເຈົ້າກ້າຂັດຂືນຄວາມປະສົງຂອງສະຫວັນບໍ? ບໍ່ວ່າ "ທັກສະ" ຂອງເຈົ້າຈະມີຫຼາຍສໍ່າໃດກໍຕາມ, ເຈົ້າສາມາດທ້າທາຍສະຫວັນໄດ້ແທ້ບໍ? ເຮົາເຊື່ອວ່າພວກເຮົາຄວນພະຍາຍາມຮູ້ຈັກຕົນເອງຢ່າງເໝາະສົມຈະດີກວ່າ. ພຣະທໍາໜຶ່ງຂໍ້ຈາກພຣະເຈົ້າສາມາດປ່ຽນສະຫວັນ ແລະ ແຜ່ນດິນໂລກ, ແລ້ວບຸກຄົນນ້ອຍໆທີ່ຈ່ອຍແຫ້ງມີແຕ່ກະດູກຈະເປັນຫຍັງໄດ້ໃນສາຍຕາຂອງພຣະເຈົ້າ?

ໃນປະສົບການຂອງເຮົາເອງ, ເຮົາໄດ້ເຫັນວ່າຍິ່ງເຈົ້າຕໍ່ສູ້ກັບພຣະເຈົ້າຫຼາຍສໍ່າໃດ, ພຣະເຈົ້າຍິ່ງຈະສະແດງອຸປະນິໄສທີ່ສະຫງ່າຜ່າເຜີຍຂອງພຣະອົງຫຼາຍສໍ່ານັ້ນ ແລະ ການຂ້ຽນຕີທີ່ພຣະອົງ "ມອບ" ໃຫ້ແກ່ເຈົ້າກໍຈະຮຸນແຮງຫຼາຍສໍ່ານັ້ນ; ຍິ່ງເຈົ້າເຊື່ອຟັງພຣະອົງຫຼາຍສໍ່າໃດ, ພຣະອົງກໍຍິ່ງຈະຮັກເຈົ້າ ແລະ ປົກປ້ອງເຈົ້າຫຼາຍສໍ່ານັ້ນ. ອຸປະນິໄສຂອງພຣະເຈົ້າເປັນຄືກັບເຄື່ອງມືແຫ່ງການລົງໂທດ: ຖ້າເຈົ້າເຊື່ອຟັງເຈົ້າກໍຈະປອດໄພ ແລະ ສະບາຍດີ; ເມື່ອເຈົ້າບໍ່ເຊື່ອຟັງ, ເມື່ອເຈົ້າພະຍາຍາມໂອ້ອວດຢູ່ສະເໝີ ແລະ ຫຼອກຫຼິ້ນຢູ່ສະເໝີ, ອຸປະນິໄສຂອງພຣະເຈົ້າກໍຈະປ່ຽນແປງທັນທີ. ພຣະອົງເປັນຄືກັບດວງຕາເວັນໃນມື້ທີ່ມືດຄຶ້ມ, ພຣະອົງຈະລີ້ຈາກເຈົ້າ ແລະ ສະແດງຄວາມໂກດຮ້າຍຂອງພຣະອົງຕໍ່ເຈົ້າ. ເຊັ່ນກັນອຸປະນິໄສຂອງພຣະອົງກໍເປັນຄືກັບສະພາບອາກາດໃນເດືອນມິຖຸນາອີກດ້ວຍ, ເວລາທີ່ທ້ອງຟ້າແຈ່ມໃສໃນລັດສະໝີຫຼາຍຫຼັກ ແລະ ຄື້ນກໍເປັນພຽງຄື້ນນ້ອຍໆທີ່ຢູ່ເທິງໜ້ານໍ້າ, ຈົນກະແສນໍ້າໄດ້ພັດແຮງຂຶ້ນຢ່າງກະທັນຫັນ ແລະ ນໍ້າກໍກາຍເປັນຄື້ນຂະໜາດໃຫຍ່. ເຈົ້າກ້າປະໝາດເມື່ອຢູ່ຕໍ່ໜ້າອຸປະນິໄສດັ່ງກ່າວຂອງພຣະເຈົ້າບໍ? ໃນປະສົບການຂອງພວກເຈົ້າ, ພວກເຈົ້າສ່ວນໃຫຍ່ທີ່ເປັນອ້າຍເອື້ອຍນ້ອງເມື່ອໄດ້ເຫັນ ພຣະວິນຍານບໍລິສຸດປະຕິບັດພາລະກິດໃນສະຫາລະນະ, ພວກເຈົ້າກໍເຕັມໄປດ້ວຍຄວາມເຊື່ອ, ແຕ່ຫຼັງຈາກນັ້ນ ທັນທີໃດທີ່ພຣະວິນຍານຂອງພຣະເຈົ້າປະຖິ້ມພວກເຈົ້າຢ່າງກະທັນຫັນ, ພວກເຈົ້າກໍທໍລະມານໃຈຫຼາຍຈົນພວກເຈົ້ານອນບໍ່ຫຼັບ, ຄິດຫາທິດທາງທີ່ພຣະວິນຍານຂອງພຣະອົງຫາຍໄປ. ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ, ເຈົ້າກໍບໍ່ສາມາດຄົ້ນພົບໄດ້ວ່າ ພຣະວິນຍານຂອງພຣະອົງໄປໃສ,

ແຕ່ຫຼັງຈາກນັ້ນ ທັນທີໃດ ພຣະອົງກໍປາກົດຕໍ່ເຈົ້າອີກຄັ້ງ ແລະ ເຈົ້າດີໃຈຢ່າງເຫຼືອລົ້ນເຊັ່ນດຽວກັບຕອນທີ່ເປໂຕໄດ້ເຫັນພຣະເຢຊູເຈົ້າຂອງເພິ່ນອີກຄັ້ງ, ດີໃຈຢ່າງເຫຼືອລົ້ນຈົນເຈົ້າເກືອບຮ້ອງໄຫ້ອອກມາ. ເຈົ້າລືມສິ່ງນີ້ແທ້ບໍ ຫຼັງຈາກທີ່ໄດ້ພະເຊີນກັບເຫດການນີ້ຫຼາຍຄັ້ງ? ພຣະເຢຊູຄຣິດເຈົ້າ, ຜູ້ທີ່ກາຍມາເປັນເນື້ອໜັງ, ຜູ້ທີ່ຖືກຄຶງເທິງໄມ້ກາງແຂນ ແລ້ວກໍຟື້ນຄືນ ແລະ ຂຶ້ນສູ່ສະຫວັນ ພຣະອົງລີ້ລັບຕໍ່ເຈົ້າບາງເວລາ ແລະ ບາງເວລາກໍປາກົດຕໍ່ເຈົ້າ. ພຣະອົງເປີດເຜີຍຕົນເອງຕໍ່ເຈົ້າ ຍ້ອນຄວາມຊອບທຳຂອງເຈົ້າ ແລະ ພຣະອົງໃຈຮ້າຍ ແລະ ຈາກເຈົ້າໄປ ຍ້ອນຄວາມຜິດບາບຂອງເຈົ້າ, ແລ້ວເປັນຫຍັງເຈົ້າຈຶ່ງບໍ່ອະທິຖານຫາພຣະອົງຫຼາຍຂຶ້ນ? ເຈົ້າບໍ່ຮູ້ບໍວ່າ ຫຼັງຈາກວັນເພັນເຕຄໍສະເຕ ພຣະເຢຊູຄຣິດເຈົ້າກໍໄດ້ມີການຝາກຝັງອີກຢ່າງໜຶ່ງເທິງແຜ່ນດິນໂລກ? ເຈົ້າຮູ້ຈັກພຽງແຕ່ຂໍ້ແທ້ຈິງທີ່ພຣະເຢຊູຄຣິດເຈົ້າໄດ້ກາຍມາເປັນເນື້ອໜັງ, ມາເທິງແຜ່ນດິນໂລກ ແລະ ຖືກຄຶງເທິງໄມ້ກາງແຂນ. ເຈົ້າບໍ່ເຄີຍເຂົ້າໃຈວ່າພຣະເຢຊູທີ່ເຈົ້າເຊື່ອເມື່ອກ່ອນແມ່ນໄດ້ມອບໝາຍພາລະກິດຂອງພຣະອົງໃຫ້ແກ່ອີກຄົນຕັ້ງແຕ່ດົນແລ້ວ ແລະ ມັນຖືກເຮັດໃຫ້ສຳເລັດຕັ້ງແຕ່ດົນແລ້ວ, ສະນັ້ນ ພຣະວິນຍານຂອງພຣະເຢຊູຄຣິດເຈົ້າຈຶ່ງໄດ້ມາເທິງແຜ່ນດິນໂລກອີກຄັ້ງໃນຮູບຮ່າງຂອງເນື້ອໜັງເພື່ອປະຕິບັດອີກສ່ວນຂອງພາລະກິດຂອງພຣະອົງ. ເຮົາຕ້ອງການທີ່ຈະເພີ່ມເຕີມບາງສິ່ງໃນນີ້, ເຖິງແມ່ນໃນປັດຈຸບັນ ເຈົ້າຢູ່ໃນກະແສນີ້, ເຮົາກ້າເວົ້າວ່າມີໜ້ອຍຄົນໃນບັນດາພວກເຈົ້າທີ່ເຊື່ອວ່າບຸກຄົນນີ້ເປັນຜູ້ທີ່ພຣະເຢຊູຄຣິດເຈົ້າໄດ້ປະທານໃຫ້ແກ່ພວກເຈົ້າ. ພວກເຈົ້າຮູ້ພຽງແຕ່ຊື່ນຊົມພຣະອົງ; ພວກເຈົ້າບໍ່ຮັບຮູ້ວ່າ ພຣະວິນຍານຂອງພຣະເຈົ້າໄດ້ມາເທິງແຜ່ນດິນໂລກອີກຄັ້ງ ແລະ ພວກເຈົ້າບໍ່ຮັບຮູ້ວ່າ ພຣະເຈົ້າໃນປັດຈຸບັນແມ່ນພຣະເຢຊູຄຣິດທີ່ຜ່ານມາຫຼາຍພັນປີ. ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ພວກເຈົ້າທຸກຄົນກຳລັງຫຼັບຕາຍ່າງ, ພວກເຈົ້າຍອມຮັບສະພາບການທີ່ພວກເຈົ້າຕົກຢູ່ ແລະ ພວກເຈົ້າບໍ່ຈິງຈັງກ່ຽວກັບສິ່ງນີ້ເລີຍ. ສະນັ້ນ ພວກເຈົ້າຈຶ່ງເຊື່ອແຕ່ປາກໃນພຣະເຢຊູ, ແຕ່ກ້າທີ່ຈະຕໍ່ຕ້ານຜູ້ທີ່ພຣະເຈົ້າເປັນພະຍານໃຫ້ໃນປັດຈຸບັນຢ່າງເປີດເຜີຍ. ເຈົ້າບໍ່ໄດ້ເປັນຄົນໂງ່ບໍ? ພຣະເຈົ້າໃນປັດຈຸບັນບໍ່ສົນໃຈກ່ຽວກັບຄວາມຜິດພາດຂອງເຈົ້າ, ພຣະອົງບໍ່ໄດ້ປະນາມເຈົ້າ. ເຈົ້າເວົ້າວ່າ ເຈົ້າເຊື່ອໃນພຣະເຢຊູ, ແລ້ວພຣະເຢຊູຄຣິດເຈົ້າຂອງເຈົ້າສາມາດປ່ອຍເຈົ້າໄປໄດ້ບໍ? ເຈົ້າຄິດວ່າ ພຣະເຈົ້າເປັນບ່ອນທີ່ໃຫ້ເຈົ້າໄດ້ລ່າເລີງ, ເວົ້າຕົວະ ແລະ ຫຼອກລວງບໍ? ເມື່ອພຣະເຢຊູຄຣິດເຈົ້າຂອງເຈົ້າເປີດເຜີຍພຣະອົງເອງອີກຄັ້ງ, ພຣະອົງຈະກຳນົດວ່າເຈົ້າຊອບທຳ ຫຼື ບໍ່ ຫຼື ເຈົ້າຊົ່ວຮ້າຍ ຫຼື ບໍ່ ໂດຍອີງຕາມວິທີທີ່ເຈົ້າປະພຶດໃນຕອນນີ້. ຄົນສ່ວນໃຫຍ່ມີແນວຄິດກ່ຽວກັບສິ່ງທີ່ເຮົາກ່າວວ່າເປັນ "ອ້າຍເອື້ອຍນ້ອງຂອງເຮົາ" ແລະ ເຊື່ອວ່າວິທີການປະຕິບັດພາລະກິດຂອງພຣະເຈົ້າຈະປ່ຽນແປງ. ຜູ້ຄົນດັ່ງກ່າວບໍ່ໄດ້ກຳລັງສ່ຽງຕາຍບໍ? ພຣະເຈົ້າຈະສາມາດເປັນພະຍານຕໍ່ຊາຕານໃນຖານະພຣະເຈົ້າເອງໄດ້ບໍ? ໃນນີ້, ເຈົ້າບໍ່ໄດ້ກຳລັງກ່າວໂທດພຣະເຈົ້າບໍ? ເຈົ້າເຊື່ອວ່າ ຜູ້ໃດກໍສາມາດກາຍມາເປັນພຣະເຈົ້າເອງໄດ້ບໍ? ຖ້າເຈົ້າຮູ້ຈັກຢ່າງແທ້ຈິງ, ແລ້ວເຈົ້າກໍຈະບໍ່ມີແນວຄິດໃດເລີຍ. ມີຂໍ້ຄວາມດັ່ງຕໍ່ໄປນີ້ໃນພຣະຄຳພີ: ທຸກສິ່ງແມ່ນສຳລັບພຣະອົງ ແລະ ທຸກສິ່ງແມ່ນມາຈາກພຣະອົງ. ພຣະອົງຈະນຳພາລູກຊາຍຫຼາຍຄົນໄປສູ່ສະຫງ່າລາສີ ແລະ ພຣະອົງຄືຫົວໜ້າຂອງພວກເຮົາ... ສະນັ້ນ ພຣະອົງຈຶ່ງບໍ່ມີຄວາມລະອາຍໃຈທີ່ຈະເອີ້ນພວກເຮົາວ່າອ້າຍນ້ອງ. ເຈົ້າອາດຈະສາມາດທ່ອງຂຶ້ນໃຈພຣະທຳເຫຼົ່ານີ້ໄດ້ຢ່າງງ່າຍດາຍ, ແຕ່ເຈົ້າບໍ່

ເຂົ້າໃຈວ່າພວກມັນໝາຍເຖິງຫຍັງກັນແທ້. ແລ້ວເຈົ້າບໍ່ໄດ້ຫຼັບຕາເຊື່ອໃນພຣະເຈົ້າບໍ?

ເຮົາເຊື່ອວ່າຮຸ່ນຂອງພວກເຮົາໄດ້ຮັບພອນເພື່ອທີ່ຈະສາມາດຍ່າງໃນເສັ້ນທາງທີ່ຜູ້ຄົນໃນຮຸ່ນກ່ອນບໍ່ສາມາດເຮັດສຳເລັດໄດ້ ແລະ ເພື່ອປະຈັກການປາກົດຕົວອີກຄັ້ງຂອງພຣະເຈົ້າຫຼັງຈາກທີ່ຜ່ານໄປສອງສາມພັນປີ ເຊິ່ງເປັນພຣະເຈົ້າທີ່ຢູ່ທ່າມກາງພວກເຮົາ ແລະ ເຕັມໄປດ້ວຍສິ່ງທັງປວງ. ເຈົ້າບໍ່ສາມາດຈິນຕະນາການໄດ້ຈັກເທື່ອວ່າເຈົ້າຈະຍ່າງໃນເສັ້ນທາງນີ້, ວ່ານີ້ຄືສິ່ງທີ່ເຈົ້າສາມາດເຮັດໄດ້? ເສັ້ນທາງນີ້ຖືກນຳພາໂດຍພຣະວິນຍານບໍລິສຸດໂດຍກົງ, ມັນຖືກນຳພາໂດຍພຣະວິນຍານທີ່ຮຸນແຮງເຈັດເທົ່າຂອງພຣະເຢຊູຄຣິດເຈົ້າ ແລະ ມັນແມ່ນເສັ້ນທາງທີ່ພຣະເຈົ້າໃນປັດຈຸບັນໄດ້ເປີດອອກສຳລັບເຈົ້າ. ແມ່ນແຕ່ໃນຄວາມຝັນທີ່ແປກປະຫຼາດທີ່ສຸດຂອງເຈົ້າ, ເຈົ້າກໍບໍ່ສາມາດຈິນຕະນາການໄດ້ວ່າພຣະເຢຊູທີ່ຜ່ານໄປສອງສາມພັນປີຈະປາກົດອີກຄັ້ງຕໍ່ໜ້າເຈົ້າ. ເຈົ້າບໍ່ຮູ້ສຶກຍິນດີບໍ? ຜູ້ໃດຈະສາມາດມາຢູ່ຊ່ອງໜ້າພຣະເຈົ້າໄດ້? ເຮົາອະທິຖານຢູ່ເລື້ອຍໆໃຫ້ກຸ່ມຂອງພວກເຮົາໄດ້ຮັບເອົາພອນອັນຍິ່ງໃຫຍ່ຈາກພຣະເຈົ້າ, ໃຫ້ພວກເຮົາເປັນທີ່ນິຍົມຊົມຊອບຂອງພຣະເຈົ້າ ແລະ ຖືກຮັບເອົາໂດຍພຣະອົງ, ແຕ່ຍັງມີອີກຫຼາຍຄັ້ງຈົນນັບບໍ່ຖ້ວນທີ່ເຮົາໄດ້ຫຼັ່ງນ້ຳຕາອັນຂົມຂື່ນສຳລັບພວກເຮົາ, ຂໍໃຫ້ພຣະເຈົ້າສ່ອງແສງສະຫວ່າງໃຫ້ແກ່ພວກເຮົາ, ເພື່ອວ່າພວກເຮົາອາດໄດ້ເຫັນການເປີດເຜີຍທີ່ຍິ່ງໃຫຍ່ກວ່າເກົ່າ. ເມື່ອເຮົາເຫັນຜູ້ຄົນທີ່ພະຍາຍາມລໍ້ລວງພຣະເຈົ້າຢູ່ເລື້ອຍໆ ແລະ ບໍ່ປາຖະໜາຈະເຮັດສິ່ງອື່ນຈັກເທື່ອ ຫຼື ຜູ້ທີ່ເອົາໃຈໃສ່ໃນເນື້ອໜັງ ຫຼື ພະຍາຍາມຫາຜົນປະໂຫຍດ ແລະ ຊື່ສຽງເພື່ອເຮັດໃຫ້ຕົນເອງເປັນສູນກາງຂອງເວທີ, ເຮົາຈະບໍ່ຮູ້ສຶກເຖິງຄວາມເຈັບປວດຢ່າງໃຫຍ່ທີ່ຢູ່ໃນຫົວໃຈຂອງເຮົາໄດ້ແນວໃດ? ຜູ້ຄົນໄຮ້ຄວາມຮູ້ສຶກແບບນັ້ນໄດ້ແນວໃດ? ພາລະກິດຂອງເຮົາບໍ່ມີຜົນກະທົບແທ້ບໍ? ຖ້າລູກໆຂອງເຈົ້າກະບົດ ແລະ ເນລະຄຸນເຈົ້າ, ຖ້າພວກເຂົາຂາດຄວາມສຳນຶກ, ຖ້າພວກເຂົາສົນໃຈແຕ່ຕົນເອງ ແລະ ບໍ່ຄຳນຶງເຖິງຄວາມຮູ້ສຶກຂອງເຈົ້າ ແລະ ພວກເຂົາໄລ່ເຈົ້າອອກຈາກເຮືອນຫຼັງຈາກທີ່ພວກເຂົາເຕີບໃຫຍ່ຂຶ້ນ, ເຈົ້າຈະຮູ້ສຶກແນວໃດໃນຈຸດນັ້ນ? ເຈົ້າຈະບໍ່ມີນ້ຳຕາໄຫຼລົງອາບແກ້ມຂອງເຈົ້າ ໃນຂະນະທີ່ເຈົ້າທົບທວນເຖິງເລືອດ, ເຫື່ອແຮງ ແລະ ຄວາມເສຍສະຫຼະທີ່ເຈົ້າໄດ້ທຸ້ມເທເພື່ອລ້ຽງພວກເຂົາບໍ? ສະນັ້ນເຮົາຈຶ່ງອະທິຖານຫຼາຍຄັ້ງຈົນນັບບໍ່ຖ້ວນຫາພຣະເຈົ້າ ແລະ ກ່າວວ່າ “ພຣະເຈົ້າເອີຍ! ມີພຽງພຣະອົງເທົ່ານັ້ນທີ່ຮູ້ວ່າຂ້ານ້ອຍແບກພາລະສຳລັບພາລະກິດຂອງພຣະອົງ. ບ່ອນໃດທີ່ການກະທຳຂອງຂ້ານ້ອຍບໍ່ສອດຄ່ອງກັບຄວາມປະສົງຂອງພຣະອົງ, ພຣະອົງກໍລົງວິໄນຂ້ານ້ອຍ, ເຮັດໃຫ້ຂ້ານ້ອຍສົມບູນ ແລະ ເຮັດໃຫ້ຂ້ານ້ອຍໄດ້ຮູ້ຕົວ. ສິ່ງດຽວທີ່ຂ້ານ້ອຍຮຽກຮ້ອງຈາກພຣະອົງກໍຄື ຂໍໃຫ້ພຣະອົງດົນບັນດານຜູ້ຄົນເຫຼົ່ານີ້ຫຼາຍຂຶ້ນ, ເພື່ອວ່າພຣະອົງອາດໄດ້ຮັບສະຫງ່າລາສີໂດຍໄວ ແລະ ພວກເຂົາອາດຈະຖືກຮັບເອົາໂດຍພຣະອົງ, ເພື່ອວ່າພາລະກິດຂອງພຣະອົງອາດບັນລຸຄວາມປະສົງຂອງພຣະອົງ ແລະ ແຜນການຂອງພຣະອົງອາດຖືກເຮັດໃຫ້ສຳເລັດກ່ອນກຳນົດ”. ພຣະເຈົ້າບໍ່ຕ້ອງການເອົາຊະນະຜູ້ຄົນຜ່ານການຂ້ຽນຕີ, ພຣະອົງບໍ່ຕ້ອງການນຳພາຜູ້ຄົນດ້ວຍການຈູງດັງຢູ່ສະເໝີ. ພຣະອົງຕ້ອງການໃຫ້ຜູ້ຄົນເຊື່ອຟັງພຣະທຳຂອງພຣະອົງ ແລະ ປະຕິບັດພາລະກິດໃນຮູບແບບທີ່ມີວິໄນ ແລະ ໂດຍຜ່ານສິ່ງນີ້ຈຶ່ງຈະພໍໃຈຄວາມປະສົງຂອງພຣະອົງ. ແຕ່ຜູ້ຄົນບໍ່ມີຄວາມລະອາຍ ແລະ ກະບົດຕໍ່ພຣະອົງຢູ່ຕະຫຼອດເວລາ. ເຮົາເຊື່ອວ່າ

ມັນດີທີ່ສຸດສຳລັບພວກເຮົາທີ່ຈະຄົ້ນຫາວິທີທີ່ງ່າຍທີ່ສຸດໃນການເຮັດໃຫ້ພຣະອົງພໍໃຈ ນັ້ນກໍຄື ເພື່ອເຊື່ອຟັງການຈັດແຈງທັງໝົດຂອງພຣະອົງ. ຖ້າເຈົ້າສາມາດບັນລຸສິ່ງນີ້ໄດ້ຢ່າງແທ້ຈິງ, ເຈົ້າກໍຈະຖືກເຮັດໃຫ້ສົມບູນ. ນີ້ບໍ່ແມ່ນສິ່ງທີ່ງ່າຍ ແລະ ໜ້າປະຕິຍິນດີບໍ? ໃຫ້ຍ່າງໃນເສັ້ນທາງທີ່ເຈົ້າຄວນຍ່າງ; ບໍ່ໃຫ້ໃສ່ໃຈກັບສິ່ງທີ່ຄົນອື່ນເວົ້າ ແລະ ບໍ່ໃຫ້ຄິດຫຼາຍເກີນໄປ. ອະນາຄົດຂອງເຈົ້າ ແລະ ໂຊກຊະຕາຂອງເຈົ້າຢູ່ໃນກຳມືຂອງເຈົ້າເອງບໍ? ເຈົ້າພະຍາຍາມຫຼົບໜີຢູ່ສະເໝີ, ປາຖະໜາທີ່ຈະຍ່າງໃນເສັ້ນທາງໆໂລກ, ແຕ່ເປັນຫຍັງເຈົ້າຈຶ່ງບໍ່ສາມາດອອກໄປໄດ້? ເປັນຫຍັງເຈົ້າຈຶ່ງສອງຈິດສອງໃຈຢືນຢູ່ທາງແຍກເປັນເວລາຫຼາຍປີ ແລະ ຫຼັງຈາກນັ້ນກໍຈົບລົງດ້ວຍການເລືອກເອົາເສັ້ນທາງນີ້ອີກຄັ້ງ? ຫຼັງຈາກທີ່ໄດ້ພະເນຈອນເປັນເວລາຫຼາຍປີ, ເປັນຫຍັງບັດນີ້ ເຈົ້າຈຶ່ງໄດ້ກັບຄືນມາສູ່ເຮືອນຫຼັງນີ້ ເຖິງແມ່ນເຈົ້າເອງບໍ່ຕ້ອງການ? ສິ່ງນີ້ແມ່ນຂຶ້ນຢູ່ກັບເຈົ້າບໍ? ສຳລັບພວກເຈົ້າທີ່ຢູ່ໃນກະແສນີ້, ຖ້າເຈົ້າບໍ່ເຊື່ອເຮົາ ແລ້ວໃຫ້ຟັງສິ່ງນີ້: ຖ້າເຈົ້າວາງແຜນທີ່ຈະຈາກໄປ, ໃຫ້ເບິ່ງວ່າພຣະເຈົ້າຈະອະນຸຍາດເຈົ້າ ຫຼື ບໍ່, ໃຫ້ເບິ່ງວ່າພຣະວິນຍານບໍລິສຸດຈະດົນບັນດານເຈົ້າແນວໃດ, ໃຫ້ຜະເຊີນກັບມັນດ້ວຍຕົວເຈົ້າເອງ. ເວົ້າແບບກົງໄປກົງມາກໍຄື ເຖິງແມ່ນວ່າເຈົ້າໄດ້ທົນທຸກກັບຄວາມໂຊກຮ້າຍ, ເຈົ້າກໍຕ້ອງທົນທຸກມັນໃນກະແສນີ້ ແລະ ຖ້າມີການທົນທຸກ, ເຈົ້າກໍຕ້ອງທົນທຸກໃນທີ່ນີ້, ໃນມື້ນີ້; ເຈົ້າບໍ່ສາມາດໄປບ່ອນອື່ນໄດ້ອີກ. ສິ່ງນີ້ແມ່ນຊັດເຈນຕໍ່ເຈົ້າບໍ? ເຈົ້າຈະໄປໃສ? ນີ້ຄືບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າ. ເຈົ້າຄິດວ່າການທີ່ພຣະເຈົ້າຄັດເລືອກເອົາຜູ້ຄົນກຸ່ມນີ້ ແມ່ນບໍ່ມີຄວາມໝາຍຫຍັງບໍ? ໃນພາລະກິດຂອງພຣະອົງໃນປັດຈຸບັນ, ພຣະເຈົ້າບໍ່ໄດ້ໃຈຮ້າຍງ່າຍ, ແຕ່ຖ້າຜູ້ຄົນພະຍາຍາມລົບກວນແຜນການຂອງພຣະອົງ, ໃບໜ້າຂອງພຣະອົງກໍຈະປ່ຽນໄປທັນທີ, ປ່ຽນຈາກສົດໃສກາຍມາເປັນມືດຄຶ້ມ. ສະນັ້ນ ເຮົາຈຶ່ງແນະນຳເຈົ້າໃຫ້ປັກຫຼັກ ແລະ ຍອມຕໍ່ການປັ້ນແຕ່ງຂອງພຣະເຈົ້າ ແລະ ຍອມໃຫ້ພຣະອົງເຮັດໃຫ້ເຈົ້າສົມບູນ. ມີແຕ່ຜູ້ຄົນທີ່ເຮັດແບບນີ້ເທົ່ານັ້ນຈຶ່ງຈະເປັນຄົນສະຫຼາດ.

# ເສັ້ນທາງ... (8)

ມັນບໍ່ແມ່ນເປັນພຽງມື້ໜຶ່ງ ຫຼື ສອງມື້ ຕັ້ງແຕ່ພຣະເຈົ້າໄດ້ມາເທິງແຜ່ນດິນໂລກເພື່ອພົວພັນກັບມະນຸດຊາດ ແລະ ເພື່ອດຳລົງຊີວິດກັບຜູ້ຄົນ. ບາງເທື່ອ ໃນລະຫວ່າງເວລານີ້ ຜູ້ຄົນໄດ້ບັນລຸຄວາມຮູ້ຢ່າງຫຼວງຫຼາຍກ່ຽວກັບພຣະເຈົ້າ ແລະ ບາງເທື່ອ ພວກເຂົາໄດ້ຮັບຄວາມເຂົ້າໃຈບາງຢ່າງໃນການຮັບໃຊ້ພຣະເຈົ້າ ແລະ ພວກເຂົາໄດ້ມີປະສົບການໃນຄວາມເຊື່ອທີ່ພວກເຂົາມີໃນພຣະເຈົ້າ. ບໍ່ວ່າຈະເປັນກໍລະນີໃດກໍຕາມ, ຜູ້ຄົນແມ່ນເຂົ້າໃຈອຸປະນິໄສຂອງພຣະເຈົ້າໃນລະດັບໃດໜຶ່ງຢູ່ແລ້ວ ແລະ ພວກເຂົາຍັງໄດ້ສະແດງອຸປະນິໄສຂອງພວກເຂົາເອງໃນຫຼາກຫຼາຍວິທີຈົນນັບບໍ່ຖ້ວນເຊັ່ນກັນ. ຕາມທີ່ເຮົາໄດ້ເຫັນນັ້ນ, ການສະແດງອອກຕ່າງໆຂອງຜູ້ຄົນແມ່ນພຽງພໍທີ່ພຣະເຈົ້າຈະໃຊ້ເປັນຕົວຢ່າງ ແລະ ກິດຈະກຳທາງດ້ານຈິດໃຈຂອງພວກເຂົາກໍພຽງພໍທີ່ພຣະອົງຈະໃຊ້ເປັນບ່ອນອ້າງອີງ. ນີ້ສາມາດເປັນດ້ານໜຶ່ງຂອງການຮ່ວມມືລະຫວ່າງມະນຸດ ແລະ ພຣະເຈົ້າ, ເປັນສິ່ງທີ່ມະນຸດບໍ່ຮູ້ຈັກ, ເຮັດໃຫ້ການສະແດງນີ້ທີ່ກຳກັບໂດຍພຣະເຈົ້າເປັນສິ່ງທີ່ຊັດແຈ້ງ ແລະ ມີຊີວິດຊີວາຫຼາຍ. ເຮົາກຳລັງເວົ້າສິ່ງເຫຼົ່ານີ້ຕໍ່ອ້າຍເອື້ອຍນ້ອງຂອງເຮົາໃນຖານະຜູ້ກຳກັບທົ່ວໄປຂອງບົດລະຄອນເລື່ອງນີ້, ພວກເຮົາທຸກຄົນສາມາດສະແດງຄວາມຄິດ ແລະ ຄວາມຮູ້ສຶກຂອງພວກເຮົາຫຼັງຈາກທີ່ໄດ້ສະແດງເລື່ອງນີ້ສຳເລັດ ແລະ ລົມກັນກ່ຽວກັບວິທີທີ່ພວກເຮົາແຕ່ລະຄົນໄດ້ຜະເຊີນກັບຊີວິດຂອງພວກເຮົາພາຍໃນບົດລະຄອນເລື່ອງນີ້. ພວກເຮົາອາດຈັດກອງປະຊຸມໃໝ່ທັງໝົດເພື່ອເປີດຫົວໃຈຂອງພວກເຮົາ ແລະ ລົມກັນກ່ຽວກັບການສະແດງຂອງພວກເຮົາ ແລະ ເບິ່ງວິທີທີ່ພຣະເຈົ້ານຳພາແຕ່ລະຄົນ ເພື່ອວ່າໃນການສະແດງຄັ້ງຕໍ່ໄປພວກເຮົາຈະສາມາດສະແດງສິລະປະຂອງພວກເຮົາໃຫ້ໄດ້ດີກວ່າເກົ່າ ແລະ ແຕ່ລະຄົນຈະໄດ້ສະແດງບົດບາດຂອງພວກເຮົາເອງດ້ວຍສຸດຄວາມສາມາດ ແລະ ບໍ່ເຮັດໃຫ້ພຣະເຈົ້າຜິດຫວັງ. ເຮົາຫວັງວ່າອ້າຍເອື້ອຍນ້ອງຂອງເຮົາຈະຈິງຈັງກັບເລື່ອງນີ້. ບໍ່ມີຜູ້ໃດຄວນຖືເບົາໃນເລື່ອງນີ້, ຍ້ອນການຫຼິ້ນບົດບາດໃດໜຶ່ງໄດ້ເປັນຢ່າງດີບໍ່ແມ່ນສິ່ງທີ່ສາມາດບັນລຸໄດ້ໃນໜຶ່ງ ຫຼື ສອງມື້; ມັນຮຽກຮ້ອງໃຫ້ພວກເຮົາຜະເຊີນກັບຊີວິດ ແລະ ລົງເລິກໃນຊີວິດທີ່ເປັນຈິງຂອງພວກເຮົາຕະຫຼອດເວລາອັນຍາວນານ ແລະ ມີປະສົບການຕົວຈິງກ່ຽວກັບຊີວິດຫຼາກຫຼາຍປະເພດ. ມີແຕ່ເມື່ອນັ້ນ ພວກເຮົາຈຶ່ງຈະສາມາດຂຶ້ນເວທີໄດ້. ເຮົາເຕັມໄປດ້ວຍຄວາມຫວັງສຳລັບອ້າຍເອື້ອຍນ້ອງຂອງເຮົາ. ເຮົາເຊື່ອວ່າພວກເຈົ້າຈະບໍ່ທໍ້ຖອຍໃຈ ຫຼື ໝົດກຳລັງໃຈ, ບໍ່ວ່າພຣະເຈົ້າຈະເຮັດຫຍັງກໍຕາມ, ພວກເຈົ້າຈະເປັນຄືກັບໝໍ້ໄຟ: ບໍ່ທໍ້ຖອຍ ແລະ ຄົງຢູ່ຈົນເຖິງທີ່ສຸດ, ຈົນກວ່າພາລະກິດຂອງພຣະເຈົ້າຈະຖືກເປີດເຜີຍຢ່າງສົມບູນ, ຈົນກວ່າບົດລະຄອນທີ່ພຣະເຈົ້າກຳກັບຈະມາເຖິງບົດສະຫຼຸບສຸດທ້າຍຂອງມັນ. ເຮົາບໍ່ໄດ້ຮຽກຮ້ອງຫຍັງອີກຈາກພວກເຈົ້າ, ເຮົາຫວັງພຽງໃຫ້ພວກເຈົ້າອົດທົນ, ໃຫ້ພວກເຈົ້າບໍ່ໃຈຮ້ອນກັບຜົນຕາມມາ, ໃຫ້ພວກເຈົ້າຮ່ວມມືກັບເຮົາເພື່ອວ່າພາລະກິດທີ່ເຮົາຄວນປະຕິບັດຈະຖືກເຮັດໃຫ້ສຳເລັດໄປດ້ວຍດີ ແລະ ບໍ່ໃຫ້ຜູ້ຄົນຂັດຂວາງ ຫຼື ລົບກວນ. ເມື່ອພາກສ່ວນນີ້ຂອງພາລະກິດໄດ້ສຳເລັດລົງ, ພຣະເຈົ້າຈະເປີດເຜີຍທຸກສິ່ງໃຫ້ກັບພວກເຈົ້າ. ຫຼັງຈາກທີ່ພາລະກິດຂອງເຮົາໄດ້ສຳເລັດລົງ, ເຮົາກໍຈະສະເໜີກຽດຕິຍົດຂອງພວກເຈົ້າຕໍ່ໜ້າພຣະເຈົ້າ

ເພື່ອບອກເລື່ອງລາວໃຫ້ແກ່ພຣະອົງ. ນັ້ນຈະບໍ່ດີກວ່າບໍ? ການຊ່ວຍກັນເພື່ອບັນລຸຈຸດປະສົງຂອງພວກເຮົາເອງ, ນີ້ບໍ່ແມ່ນວິທີແກ້ໄຂທີ່ສົມບູນສຳລັບທຸກຄົນບໍ? ຕອນນີ້ແມ່ນເວລາທີ່ຫຍຸ້ງຍາກ, ເວລາທີ່ຮຽກຮ້ອງໃຫ້ພວກເຈົ້າຈ່າຍລາຄາ. ເພາະເຮົາເປັນຜູ້ກຳກັບໃນຕອນນີ້, ເຮົາຫວັງວ່າຈະບໍ່ມີຜູ້ໃດໃນບັນດາພວກເຈົ້າວິຕົກກັງວົນຍ້ອນສິ່ງນີ້. ສິ່ງດັ່ງກ່າວຄືພາລະກິດທີ່ເຮົາກຳລັງປະຕິບັດ. ບາງເທື່ອ ມື້ໜຶ່ງເຮົາຈະປ່ຽນເປັນ "ໜ່ວຍສະເພາະກິດ" ທີ່ເໝາະສົມ ແລະ ບໍ່ເຮັດໃຫ້ສິ່ງຕ່າງໆຫຍຸ້ງຍາກສຳລັບພວກເຈົ້າອີກຕໍ່ໄປ. ເຮົາຈະສະແດງສິ່ງໃດກໍຕາມທີ່ພວກເຈົ້າຕ້ອງການເຫັນໃຫ້ກັບພວກເຈົ້າ ແລະ ມອບສິ່ງໃດກໍຕາມທີ່ພວກເຈົ້າຕ້ອງການໄດ້ຍິນໃຫ້ກັບພວກເຈົ້າ. ແຕ່ບໍ່ແມ່ນຕອນນີ້. ພາລະກິດໃນປັດຈຸບັນຄືພາລະກິດນີ້ ແລະ ເຮົາບໍ່ສາມາດປ່ອຍໃຫ້ພວກເຈົ້າມີອິດສະຫຼະ ແລະ ປ່ອຍໃຫ້ພວກເຈົ້າເຮັດໃນສິ່ງທີ່ພວກເຈົ້າຢາກເຮັດ. ສິ່ງນັ້ນຈະເຮັດໃຫ້ພາລະກິດຂອງເຮົາຫຍຸ້ງຍາກ; ເວົ້າຢ່າງແທ້ຈິງກໍຄື ມັນຈະບໍ່ເກີດໝາກຜົນຫຍັງ ແລະ ມັນຈະບໍ່ເປັນປະໂຫຍດສຳລັບພວກເຈົ້າເລີຍ. ສະນັ້ນ ໃນມື້ນີ້ ພວກເຈົ້າຕ້ອງທົນທຸກກັບ "ຄວາມອະຍຸຕິທຳ". ເມື່ອມື້ນັ້ນມາເຖິງ ແລະ ຂັ້ນຕອນນີ້ຂອງພາລະກິດຂອງເຮົາໄດ້ສຳເລັດລົງ, ເຮົາກໍຈະເປັນອິດສະຫຼະ, ເຮົາຈະບໍ່ແບກຮັບພາລະທີ່ໜັກໜ່ວງດັ່ງກ່າວນີ້ອີກ ແລະ ເຮົາຈະຍອມເຮັດຕາມທຸກສິ່ງທີ່ພວກເຈົ້າຮຽກຮ້ອງຈາກເຮົາ; ຕາບໃດທີ່ມັນເປັນປະໂຫຍດສຳລັບຊີວິດຂອງພວກເຈົ້າ, ເຮົາກໍຈະປະຕິບັດຕາມທຸກສິ່ງທີ່ພວກເຈົ້າຂໍ. ມື້ນີ້, ເຮົາໄດ້ຮັບເອົາຄວາມຮັບຜິດຊອບອັນໜັກໜ່ວງ. ເຮົາບໍ່ສາມາດຂັດຂືນຄຳສັ່ງຂອງພຣະເຈົ້າພຣະບິດາ ແລະ ເຮົາບໍ່ສາມາດລົບກວນແຜນການພາລະກິດຂອງເຮົາ. ເຮົາບໍ່ສາມາດຈັດການເລື່ອງສ່ວນຕົວຂອງເຮົາຜ່ານວຽກງານທຸລະກິດຂອງເຮົາ ແລະ ເຮົາຫວັງວ່າພວກເຈົ້າທຸກຄົນຈະສາມາດເຂົ້າໃຈ ແລະ ໃຫ້ອະໄພເຮົາ, ຍ້ອນທຸກສິ່ງທີ່ເຮົາເຮັດແມ່ນຕາມຄວາມປາຖະໜາຂອງພຣະເຈົ້າພຣະບິດາ; ເຮົາເຮັດທຸກສິ່ງທີ່ພຣະອົງຕ້ອງການໃຫ້ເຮົາເຮັດ, ບໍ່ວ່າພຣະອົງຈະຕ້ອງການຫຍັງກໍຕາມ ແລະ ເຮົາຈະບໍ່ເຮັດໃຫ້ພຣະອົງໃຈຮ້າຍ ຫຼື ເຮັດໃຫ້ພຣະອົງໂກດຮ້າຍ. ເຮົາພຽງແຕ່ເຮັດສິ່ງທີ່ເຮົາຄວນເຮັດ. ສະນັ້ນ ໃນນາມຂອງພຣະເຈົ້າພຣະບິດາ, ເຮົາແນະນຳພວກເຈົ້າໃຫ້ອົດທົນອີກໜ້ອຍໜຶ່ງ. ບໍ່ມີຜູ້ໃດທີ່ຈຳເປັນຕ້ອງກັງວົນ. ຫຼັງຈາກທີ່ເຮົາໄດ້ສຳເລັດສິ່ງທີ່ເຮົາຈຳເປັນຕ້ອງເຮັດ, ພວກເຈົ້າກໍຈະສາມາດເຮັດໃນສິ່ງທີ່ພວກເຈົ້າຕ້ອງການ ແລະ ເຫັນສິ່ງໃດກໍຕາມທີ່ພວກເຈົ້າມັກ, ແຕ່ເຮົາຕ້ອງໄດ້ສຳເລັດພາລະກິດທີ່ເຮົາຕ້ອງເຮັດກ່ອນ.

ພວກເຮົາຈຳເປັນຕ້ອງມີຄວາມເຊື່ອ ແລະ ຄວາມຮັກທີ່ສຸດໃນຂັ້ນຕອນນີ້ຂອງພາລະກິດ. ພວກເຮົາອາດສະດຸດດ້ວຍຄວາມປະໝາດເລັກນ້ອຍ, ຍ້ອນຂັ້ນຕອນນີ້ຂອງພາລະກິດແມ່ນແຕກຕ່າງຈາກທຸກຂັ້ນຕອນທີ່ຜ່ານມາ: ສິ່ງທີ່ພຣະເຈົ້າກຳລັງເຮັດໃຫ້ສົມບູນແມ່ນຄວາມເຊື່ອຂອງມະນຸດຊາດທີ່ບໍ່ສາມາດເຫັນໄດ້ ແລະ ຈັບຕ້ອງໄດ້. ສິ່ງທີ່ພຣະເຈົ້າເຮັດກໍຄືປ່ຽນພຣະທຳໃຫ້ກາຍເປັນຄວາມເຊື່ອ, ຄວາມຮັກ ແລະ ຊີວິດ. ຜູ້ຄົນຕ້ອງບັນລຸເຖິງຈຸດທີ່ພວກເຂົາໄດ້ຮັບການຫຼໍ່ຫຼອມຫຼາຍຮ້ອຍຄັ້ງ ແລະ ມີຄວາມເຊື່ອທີ່ຍິ່ງໃຫຍ່ກວ່າຄວາມເຊື່ອຂອງໂຢບ. ພວກເຂົາຕ້ອງອົດກັ້ນກັບຄວາມທຸກຢ່າງໃຫຍ່ຫຼວງ ແລະ ຄວາມທໍລະມານທຸກຮູບແບບໂດຍບໍ່ຈາກພຣະເຈົ້າໄປ. ເມື່ອພວກເຂົາເຊື່ອຟັງຈົນເຖິງຕາຍ ແລະ ມີຄວາມເຊື່ອທີ່ຍິ່ງໃຫຍ່ໃນພຣະເຈົ້າ, ແລ້ວຂັ້ນຕອນນີ້ຂອງພາລະກິດຂອງພຣະເຈົ້າກໍສຳເລັດແລ້ວ.

ນີ້ແມ່ນພາລະກິດທີ່ເຮົາໄດ້ຮັບເອົາ, ສະນັ້ນ ເຮົາຈຶ່ງຫວັງວ່າ ອ້າຍເອື້ອຍນ້ອງຂອງເຮົາຈະສາມາດເຂົ້າໃຈເຖິງສະຖານະການທີ່ລຳບາກຂອງເຮົາ ແລະ ບໍ່ຮຽກຮ້ອງຫຍັງຈາກເຮົາອີກ. ນີ້ຄືສິ່ງທີ່ພຣະເຈົ້າພຣະບິດາຮຽກຮ້ອງຈາກເຮົາ ແລະ ເຮົາບໍ່ສາມາດຫຼີບໜີຈາກຄວາມເປັນຈິງນີ້ໄດ້; ເຮົາຕ້ອງປະຕິບັດພາລະກິດທີ່ເຮົາຄວນເຮັດ. ເຮົາຫວັງພຽງແຕ່ວ່າ ພວກເຈົ້າຈະບໍ່ໃຊ້ການໂຕ້ຖຽງແບບດື້ດຶງ ແລະ ດ້ວຍເຫດຜົນທີ່ເສື່ອມຊາມ ວ່າພວກເຈົ້າມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ບໍ່ໄດ້ເບິ່ງເລື່ອງຕ່າງໆຢ່າງງ່າຍເກີນໄປ. ຄວາມຄິດຂອງພວກເຈົ້າແມ່ນເດັກນ້ອຍເກີນໄປ, ໄຮ້ດຽງສາເກີນໄປ. ພາລະກິດຂອງພຣະເຈົ້າບໍ່ໄດ້ງ່າຍຄືກັບທີ່ພວກເຈົ້າຈິນຕະນາການໄວ້, ພຣະອົງບໍ່ໄດ້ເຮັດທຸກສິ່ງທີ່ພຣະອົງຕ້ອງການຢາກເຮັດ; ຖ້າພຣະອົງເຮັດ, ແຜນການຂອງພຣະອົງກໍຈະລົ້ມລະລາຍ. ພວກເຈົ້າຈະບໍ່ເຫັນມັນເປັນເຊັ່ນນັ້ນບໍ? ເຮົາກຳລັງປະຕິບັດພາລະກິດຂອງພຣະເຈົ້າ. ເຮົາບໍ່ພຽງແຕ່ເຮັດວຽກທີ່ແປກປະຫຼາດສຳລັບຜູ້ຄົນ ໂດຍເຮັດທຸກສິ່ງທີ່ເຮົາຮູ້ສຶກວ່າຢາກເຮັດ ແລະ ຈັດແຈງດ້ວຍຕົນເອງວ່າເຮົາຈະເຮັດຫຍັງ. ສິ່ງຕ່າງໆແມ່ນບໍ່ໄດ້ງ່າຍແບບນັ້ນໃນປັດຈຸບັນ. ເຮົາຖືກສົ່ງໂດຍພຣະບິດາໃຫ້ເຮັດໜ້າທີ່ເປັນຜູ້ກຳກັບ, ພວກເຈົ້າຄິດວ່າເຮົາໄດ້ຈັດແຈງ ແລະ ເລືອກສິ່ງນີ້ດ້ວຍຕົນເອງບໍ? ແນວຄິດຂອງມະນຸດແມ່ນມັກຈະຂັດຂວາງພາລະກິດຂອງພຣະເຈົ້າຢູ່ສະເໝີ, ດ້ວຍເຫດນັ້ນຫຼັງຈາກທີ່ເຮົາປະຕິບັດພາລະກິດໃນໄລຍະໜຶ່ງ ຈຶ່ງມີການຮຽກຮ້ອງຫຼາຍຢ່າງຈາກຜູ້ຄົນວ່າເຮົາບໍ່ສາມາດປະຕິບັດໄດ້ ແລະ ຜູ້ຄົນກໍປ່ຽນແປງແນວຄິດຂອງພວກເຂົາກ່ຽວກັບເຮົາ. ພວກເຈົ້າທຸກຄົນຄວນຊັດເຈນກ່ຽວກັບແນວຄິດເຫຼົ່ານີ້ຂອງພວກເຈົ້າ; ເຮົາຈະບໍ່ນຳພວກມັນແຕ່ລະຢ່າງຂຶ້ນມາເວົ້າ, ເຮົາພຽງແຕ່ສາມາດອະທິບາຍພາລະກິດທີ່ເຮົາປະຕິບັດເທົ່ານັ້ນ. ຄວາມຮູ້ສຶກຂອງເຮົາບໍ່ໄດ້ເຈັບປວດຍ້ອນສິ່ງນີ້ເລີຍ. ຫຼັງຈາກທີ່ພວກເຈົ້າເຂົ້າໃຈສິ່ງນັ້ນ, ພວກເຈົ້າກໍຈະສາມາດເບິ່ງມັນດ້ວຍວິທີໃດກໍໄດ້ທີ່ເຈົ້າມັກ. ເຮົາຈະບໍ່ຄັດຄ້ານອີກ, ຍ້ອນນີ້ຄືວິທີທີ່ພຣະເຈົ້າປະຕິບັດພາລະກິດ; ເຮົາບໍ່ໄດ້ມີພັນທະເພື່ອອະທິບາຍມັນທັງໝົດ. ເຮົາພຽງແຕ່ມາເພື່ອປະຕິບັດພາລະກິດແຫ່ງພຣະທຳ, ເພື່ອປະຕິບັດ ແລະ ເຮັດໃຫ້ບົດລະຄອນນີ້ໄດ້ສະແດງຈົນສຳເລັດຜ່ານການຊີ້ນຳແຫ່ງພຣະທຳ. ເຮົາບໍ່ຈຳເປັນຕ້ອງເວົ້າເຖິງສິ່ງໃດອີກ ຫຼື ເຮົາບໍ່ສາມາດເຮັດສິ່ງອື່ນອີກ. ເຮົາໄດ້ອະທິບາຍທຸກສິ່ງທີ່ເຮົາຕ້ອງເວົ້າ, ເຮົາບໍ່ສົນໃຈວ່າພວກເຈົ້າຄິດແນວໃດ ແລະ ມັນບໍ່ສຳຄັນສຳລັບເຮົາ. ແຕ່ເຮົາຍັງຕ້ອງການທີ່ຈະເຕືອນພວກເຈົ້າວ່າ ພາລະກິດຂອງພຣະເຈົ້າບໍ່ໄດ້ງ່າຍຄືກັບທີ່ພວກເຈົ້າຈິນຕະນາການ. ຍິ່ງມັນສອດຄ່ອງກັບແນວຄິດຂອງຜູ້ຄົນໜ້ອຍສໍ່າໃດ, ຄວາມໝາຍຂອງມັນກໍຍິ່ງເລິກເຊິ່ງຫຼາຍສໍ່ານັ້ນ; ແລະ ຍິ່ງມັນສອດຄ່ອງກັບແນວຄິດຂອງຜູ້ຄົນຫຼາຍສໍ່າໃດ, ມັນກໍຍິ່ງມີຄຸນຄ່າໜ້ອຍລົງ ແລະ ຍິ່ງຂາດຄວາມໝາຍທີ່ແທ້ຈິງຫຼາຍສໍ່ານັ້ນ. ໃຫ້ພິຈາລະນາຄຳເວົ້າເຫຼົ່ານີ້ຢ່າງລະມັດລະວັງ, ນີ້ຄືທັງໝົດທີ່ເຮົາຈະເວົ້າກ່ຽວກັບສິ່ງນັ້ນ. ພວກເຈົ້າເອງສາມາດວິເຄາະສ່ວນທີ່ເຫຼືອດ້ວຍຕົນເອງ. ເຮົາຈະບໍ່ອະທິບາຍມັນ.

ຜູ້ຄົນຈິນຕະນາການວ່າ ພຣະເຈົ້າເຮັດສິ່ງຕ່າງໆດ້ວຍວິທີໃດໜຶ່ງ, ແຕ່ຕະຫຼອດປີທີ່ຜ່ານມານີ້ ຫຼື ປະມານນັ້ນ, ສິ່ງທີ່ພວກເຮົາໄດ້ເຫັນ ແລະ ໄດ້ຜະເຊີນກ່ຽວກັບພາລະກິດຂອງພຣະເຈົ້າແມ່ນໄດ້ສອດຄ່ອງກັບແນວຄິດຂອງມະນຸດແທ້ບໍ? ນັບຕັ້ງແຕ່ການເນລະມິດສ້າງໂລກຈົນເຖິງປັດຈຸບັນ, ບໍ່ມີແມ່ນແຕ່ຄົນດຽວທີ່ສາມາດເຂົ້າໃຈຂັ້ນຕອນ ຫຼື ກົດລະບຽບຂອງພາລະກິດຂອງພຣະເຈົ້າ. ຖ້າພວກເຂົາ

ສາມາດເຂົ້າໃຈ, ເປັນຫຍັງຜູ້ນຳທາງສາສະໜາເຫຼົ່ານັ້ນຈຶ່ງບໍ່ເຂົ້າໃຈວ່າ ນີ້ແມ່ນວິທີທີ່ພຣະເຈົ້າປະຕິບັດພາລະກິດໃນປັດຈຸບັນ? ເປັນຫຍັງຈຶ່ງມີໜ້ອຍຄົນທີ່ເຂົ້າໃຈເຖິງຄວາມເປັນຈິງໃນປັດຈຸບັນ? ຈາກສິ່ງນີ້ພວກເຮົາສາມາດເຫັນວ່າ ບໍ່ມີຜູ້ໃດເຂົ້າໃຈພາລະກິດຂອງພຣະເຈົ້າເລີຍ. ຜູ້ຄົນຕ້ອງປະຕິບັດຕາມການຊີ້ນຳຂອງພຣະວິນຍານຂອງພຣະເຈົ້າເທົ່ານັ້ນ; ພວກເຂົາຕ້ອງບໍ່ນຳໃຊ້ກົດລະບຽບຕ່າງໆກັບພາລະກິດຂອງພຣະອົງຢ່າງເຂັ້ມງວດ. ຖ້າເຈົ້າເອົາຮູບພາບ ແລະ ພາລະກິດຂອງພຣະເຢຊູ ແລະ ປຽບທຽບມັນກັບພາລະກິດໃນປັດຈຸບັນຂອງພຣະເຈົ້າ, ມັນກໍຈະເປັນຄືກັບຊາວຢິວທີ່ພະຍາຍາມປຽບທຽບພຣະເຢຊູກັບພຣະເຢໂຮວາ. ເຈົ້າຈະບໍ່ລົ້ມເຫຼວໃນການເຮັດແບບນີ້ບໍ? ແມ່ນແຕ່ພຣະເຢຊູເອງກໍບໍ່ຮູ້ວ່າພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍແມ່ນຫຍັງ; ສິ່ງດຽວທີ່ພຣະອົງຮູ້ກໍຄື ພຣະອົງຕ້ອງເຮັດໃຫ້ສຳເລັດພາລະກິດແຫ່ງການຄຶງໄມ້ກາງແຂນເທົ່ານັ້ນ. ແລ້ວຄົນອື່ນໆຈະສາມາດຮູ້ໄດ້ແນວໃດ? ພວກເຂົາຈະຮູ້ໄດ້ແນວໃດວ່າພຣະເຈົ້າຈະປະຕິບັດພາລະກິດຫຍັງໃນອະນາຄົດ? ພຣະເຈົ້າຈະສາມາດເປີດເຜີຍແຜນການຂອງພຣະອົງຕໍ່ມະນຸດທີ່ຖືກຄອບງຳດ້ວຍຊາຕານໄດ້ແນວໃດ? ນັ້ນບໍ່ແມ່ນສິ່ງທີ່ໂງ່ບໍ? ພຣະເຈົ້າຮຽກຮ້ອງໃຫ້ເຈົ້າຮູ້ ແລະ ເຂົ້າໃຈຄວາມປະສົງຂອງພຣະອົງ. ພຣະອົງບໍ່ໄດ້ຮຽກຮ້ອງໃຫ້ເຈົ້າພິຈາລະນາແຜນການໃນອະນາຄົດຂອງພຣະອົງ. ໃຫ້ພວກເຮົາສົນໃຈກັບຕົນເອງໃນຄວາມເຊື່ອໃນພຣະເຈົ້າເທົ່ານັ້ນ, ປະຕິບັດຕາມການຊີ້ນຳຂອງພຣະອົງ, ຈິງຈັງໃນການຈັດການກັບຄວາມຫຍຸ້ງຍາກຢ່າງແທ້ຈິງຂອງພວກເຮົາ ແລະ ບໍ່ເຮັດໃຫ້ສິ່ງຕ່າງໆຫຍຸ້ງຍາກສຳລັບພຣະເຈົ້າ ຫຼື ສ້າງບັນຫາໃຫ້ແກ່ພຣະອົງ. ພວກເຮົາຄວນເຮັດສິ່ງທີ່ພວກເຮົາຄວນເຮັດ; ຕາບໃດທີ່ພວກເຮົາສາມາດຢູ່ພາຍໃນພາລະກິດປັດຈຸບັນຂອງພຣະເຈົ້າ, ນັ້ນກໍພຽງພໍແລ້ວ! ສິ່ງດັ່ງກ່າວແມ່ນເສັ້ນທາງທີ່ເຮົາໄດ້ນຳພາພວກເຈົ້າ. ຖ້າພວກເຮົາຕັ້ງໃຈທີ່ຈະສືບຕໍ່ໄປຂ້າງໜ້າ, ພຣະເຈົ້າຈະບໍ່ຂົ່ມເຫັງພວກເຮົາແຕ່ລະຄົນ. ຕະຫຼອດປະສົບການພິເສດຂອງພວກເຈົ້າໃນປີຜ່ານມາ, ພວກເຈົ້າໄດ້ຮັບເອົາຫຼາຍສິ່ງທີ່ຍິ່ງໃຫຍ່; ເຮົາເຊື່ອວ່າພວກເຈົ້າຈະບໍ່ເສຍໃຈຫຼາຍ. ເສັ້ນທາງທີ່ເຮົາກຳລັງນຳພາພວກເຈົ້າແມ່ນວຽກງານຂອງເຮົາ ແລະ ພາລະກິດຂອງເຮົາ ແລະ ມັນຖືກກຳນົດໂດຍພຣະເຈົ້າຕັ້ງແຕ່ດົນແລ້ວ, ເຊິ່ງພວກເຮົາໄດ້ຖືກກຳນົດລ່ວງໜ້າໃຫ້ລອດມາເຖິງປັດຈຸບັນ. ການທີ່ພວກເຮົາສາມາດເຮັດສິ່ງນີ້ໄດ້ກໍຍ້ອນພອນອັນຍິ່ງໃຫຍ່ຂອງພວກເຮົາ ແລະ ເຖິງແມ່ນວ່າ ມັນບໍ່ໄດ້ເປັນເສັ້ນທາງທີ່ລາບລື່ນ, ມິດຕະພາບຂອງພວກເຮົາກໍເປັນນິດນິລັນ ແລະ ມັນຈະຖືກສິ່ງຕໍ່ສູ່ຍຸກຕ່າງໆ. ບໍ່ວ່າຈະເປັນສຽງຮ້ອງໄຮ ແລະ ສຽງຫົວຂວັນ ຫຼື ຄວາມໂສກເສົ້າ ແລະ ນໍ້າຕາ, ຂໍໃຫ້ມັນກາຍມາເປັນຄວາມຊົງຈຳທີ່ສວຍງາມທັງໝົດ! ພວກເຈົ້າອາດຮູ້ວ່າມື້ແຫ່ງພາລະກິດຂອງເຮົາແມ່ນຍັງອີກບໍ່ດົນ. ເຮົາມີໂຄງການພາລະກິດຫຼາຍອັນ ແລະ ເຮົາບໍ່ສາມາດຕິດຕາມພວກເຈົ້າຢູ່ເລື້ອຍໆ. ເຮົາຫວັງວ່າ ພວກເຈົ້າຈະສາມາດເຂົ້າໃຈເຮົາໃນສິ່ງນີ້, ຍ້ອນມິດຕະພາບເດີມຂອງພວກເຮົາບໍ່ໄດ້ປ່ຽນແປງ. ບາງເທື່ອ ມື້ໜຶ່ງ, ເຮົາຈະປາກົດຕໍ່ໜ້າພວກເຈົ້າອີກຄັ້ງ ແລະ ເຮົາຫວັງວ່າພວກເຈົ້າຈະບໍ່ເຮັດໃຫ້ສິ່ງຕ່າງໆຫຍຸ້ງຍາກສຳລັບເຮົາ. ແທ້ຈິງແລ້ວ, ເຮົາແມ່ນແຕກຕ່າງຈາກພວກເຈົ້າ. ເຮົາທ່ອງທ່ຽວໄປທົ່ວທຸກຫົນແຫ່ງເພື່ອພາລະກິດຂອງເຮົາ ແລະ ເຮົາບໍ່ໄດ້ດຳລົງຊີວິດຂອງເຮົາກັບການຢູ່ຊື່ໆໃນໂຮງແຮມເທົ່ານັ້ນ. ບໍ່ວ່າພວກເຈົ້າຈະເປັນແນວໃດກໍຕາມ, ເຮົາພຽງແຕ່ເຮັດສິ່ງທີ່ເຮົາ

ຄວນເຮັດ. ເຮົາຫວັງວ່າສິ່ງຕ່າງໆທີ່ເຮົາແບ່ງປັນໃນອະດີດຈະກາຍມາເປັນດອກໄມ້ແຫ່ງມິດຕະພາບຂອງພວກເຮົາ.

ສາມາດເວົ້າໄດ້ວ່າ ເສັ້ນທາງນີ້ຖືກເປີດຂຶ້ນໂດຍເຮົາ ແລະ ບໍ່ວ່າຈະຂົມຂື່ນ ຫຼື ອ່ອນຫວານ, ເຮົາກໍໄດ້ນໍາຫົນທາງດັ່ງກ່າວແລ້ວ. ການທີ່ພວກເຮົາໄດ້ມາຈົນເຖິງມື້ນີ້ກໍລ້ວນແລ້ວແຕ່ຂຶ້ນກັບຄວາມກະລຸນາຂອງພຣະເຈົ້າ. ອາດມີບາງຄົນທີ່ຂອບໃຈເຮົາ ແລະ ອາດມີບາງຄົນທີ່ຕໍ່ວ່າເຮົາ, ແຕ່ບໍ່ມີສິ່ງໃດທີ່ສໍາຄັນ. ສິ່ງທີ່ເຮົາຕ້ອງການເຫັນກໍມີພຽງແຕ່ໃຫ້ສິ່ງທີ່ຄວນຖືກບັນລຸໃນຜູ້ຄົນກຸ່ມນີ້ໄດ້ຖືກບັນລຸ. ນີ້ແມ່ນສິ່ງທີ່ຄວນໄດ້ຮັບການສະເຫຼີມສະຫຼອງ. ສະນັ້ນ ເຮົາບໍ່ມີຄວາມແຄ້ນເຄືອງຕໍ່ຄົນທີ່ຕໍ່ວ່າເຮົາ; ສິ່ງທີ່ເຮົາຕ້ອງການແມ່ນພຽງການເຮັດໃຫ້ພາລະກິດຂອງເຮົາສໍາເລັດໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອວ່າຫົວໃຈຂອງພຣະເຈົ້າຈະໄດ້ພັກຜ່ອນໂດຍໄວ. ໃນເວລານັ້ນ ເຮົາຈະບໍ່ແບກພາລະອັນໜັກໜ່ວງ ແລະ ຈະບໍ່ມີຄວາມກັງວົນໃນຫົວໃຈຂອງພຣະເຈົ້າ. ພວກເຈົ້າເຕັມໃຈທີ່ຈະປັບປຸງການຮ່ວມມືຂອງພວກເຈົ້າບໍ? ມັນຈະບໍ່ດີກວ່າບໍທີ່ຈະສຸມໃສ່ກັບການປະຕິບັດພາລະກິດຂອງພຣະເຈົ້າໃຫ້ເກີດໝາກຜົນ? ຕະຫຼອດຊ່ວງເວລານີ້, ມັນຖືກຕ້ອງທີ່ຈະເວົ້າວ່າ ພວກເຮົາໄດ້ອົດທົນກັບຄວາມລໍາບາກຫຼາຍຈົນນັບບໍ່ຖ້ວນ ແລະ ໄດ້ຜະເຊີນຄວາມປິຕິຍິນດີ ແລະ ຄວາມໂສກເສົ້າທຸກຮູບແບບ. ໂດຍລວມແລ້ວ, ການປະຕິບັດຂອງພວກເຈົ້າແຕ່ລະຄົນໂດຍພື້ນຖານແມ່ນໄດ້ຄະແນນ. ບາງເທື່ອ ໃນອະນາຄົດອາດຈະມີພາລະກິດທີ່ດີກວ່າ ທີ່ຮຽກຮ້ອງຈາກພວກເຈົ້າ, ແຕ່ຢ່າຮໍ່າໄຮຄວາມຄິດຂອງເຮົາ; ພຽງແຕ່ເຮັດໃນສິ່ງທີ່ເຈົ້າຄວນເຮັດ. ສິ່ງທີ່ເຮົາຕ້ອງເຮັດແມ່ນເກືອບສໍາເລັດແລ້ວ; ເຮົາຫວັງວ່າພວກເຈົ້າຈະຍັງຊື່ສັດຕະຫຼອດເວລາ ແລະ ພວກເຈົ້າຈະບໍ່ອາວອນຫາພາລະກິດຂອງເຮົາ. ພວກເຈົ້າຄວນຮູ້ວ່າ ເຮົາໄດ້ມາເພື່ອສໍາເລັດຂັ້ນຕອນໜຶ່ງຂອງພາລະກິດເທົ່ານັ້ນ ແລະ ບໍ່ໄດ້ມາເພື່ອປະຕິບັດພາລະກິດທັງໝົດຂອງພຣະເຈົ້າຢ່າງແນ່ນອນ. ພວກເຈົ້າຕ້ອງຊັດເຈນກ່ຽວກັບສິ່ງນີ້ ແລະ ບໍ່ມີແນວຄິດອື່ນກ່ຽວກັບມັນ. ພາລະກິດຂອງພຣະເຈົ້າແມ່ນຈໍາເປັນຕ້ອງມີຫຼາຍວິທີເພື່ອເຮັດໃຫ້ສໍາເລັດ; ພວກເຈົ້າບໍ່ສາມາດເພິ່ງພາເຮົາຢູ່ສະເໝີ. ບາງເທື່ອ ພວກເຈົ້າໄດ້ຮັບຮູ້ແລ້ວວ່າ ເຮົາໄດ້ມາເພື່ອປະຕິບັດສ່ວນໜຶ່ງຂອງພາລະກິດເທົ່ານັ້ນ, ສ່ວນທີ່ບໍ່ໄດ້ເປັນຕົວແທນໃຫ້ພຣະເຢໂຮວາ ຫຼື ພຣະເຢຊູ; ພາລະກິດຂອງພຣະເຈົ້າແມ່ນຖືກແບ່ງອອກເປັນຫຼາຍຂັ້ນຕອນ, ສະນັ້ນ ພວກເຈົ້າຕ້ອງບໍ່ເຄັ່ງຄັດເກີນໄປ. ໃນຂະນະທີ່ເຮົາກໍາລັງປະຕິບັດພາລະກິດ ພວກເຈົ້າຕ້ອງຟັງເຮົາ. ໃນແຕ່ລະຍຸກ, ພາລະກິດຂອງພຣະເຈົ້າປ່ຽນແປງ; ມັນບໍ່ໄດ້ຫຼໍ່ມາຈາກເຕົາຫຼໍ່ດຽວກັນ ແລະ ມັນບໍ່ໄດ້ເປັນເພງເກົ່າຄືກັນໝົດໃນແຕ່ລະຄັ້ງ. ແລ້ວໃນແຕ່ລະຂັ້ນຕອນ ພາລະກິດຂອງພຣະເຈົ້າກໍເໝາະສົມກັບຍຸກດັ່ງກ່າວ ແລະ ມີການປ່ຽນແປງຕາມການປ່ຽນແປງຂອງຍຸກດັ່ງກ່າວ. ດ້ວຍເຫດນັ້ນ ເນື່ອງຈາກວ່າເຈົ້າໄດ້ເກີດໃນຍຸກນີ້ ເຈົ້າຈຶ່ງຕ້ອງກິນ ແລະ ດື່ມພຣະທໍາຂອງພຣະເຈົ້າ ແລະ ອ່ານພຣະທໍາເຫຼົ່ານີ້. ມື້ໜຶ່ງພາລະກິດຂອງເຮົາກໍຈະປ່ຽນແປງ, ໃນກໍລະນີນີ້ ພວກເຈົ້າຕ້ອງສືບຕໍ່ເດີນໄປຂ້າງໜ້າຕາມທີ່ພວກເຈົ້າຄວນເຮັດ; ພາລະກິດຂອງພຣະເຈົ້າບໍ່ສາມາດຜິດພາດໄດ້. ຢ່າໃສ່ໃຈກັບວິທີທີ່ໂລກພາຍນອກປ່ຽນແປງ; ພຣະເຈົ້າບໍ່ສາມາດຜິດພາດໄດ້ ແລະ ພາລະກິດຂອງພຣະອົງບໍ່ສາມາດຜິດພາດໄດ້. ມັນເປັນພຽງແຕ່ວ່າ ບາງເທື່ອ ພາລະກິດເດີມຂອງພຣະອົງຕາຍໄປ ແລະ ພາລະກິດ

ໃໝ່ຂອງພຣະອົງເລີ່ມເກີດຂຶ້ນ. ເຖິງຢ່າງໃດກໍຕາມ ສິ່ງນັ້ນບໍ່ໄດ້ໝາຍຄວາມວ່າ ຍ້ອນພາລະກິດເກົ່າຜິດພາດ, ພາລະກິດໃໝ່ຈຶ່ງເກີດຂຶ້ນ. ນັ້ນແມ່ນຄວາມເຊື່ອທີ່ຜິດ! ບໍ່ສາມາດເວົ້າໄດ້ວ່າພາລະກິດຂອງພຣະເຈົ້າຖືກຕ້ອງ ຫຼື ຜິດພາດ, ພຽງແຕ່ສາມາດເວົ້າໄດ້ວ່າ ພາລະກິດນັ້ນມາກ່ອນ ຫຼື ມານຳຫຼັງ. ນີ້ຄືການຊີ້ນຳສຳລັບຜູ້ຄົນທີ່ເຊື່ອໃນພຣະເຈົ້າ ແລະ ຈົ່ງຢ່າຖືເບົາໃນການປະຕິບັດຕໍ່ສິ່ງນີ້.

# ຜູ້ເຊື່ອຄວນມີມຸມມອງແບບໃດ

ມະນຸດໄດ້ຮັບຫຍັງ ນັບຕັ້ງແຕ່ທີ່ໄດ້ເລີ່ມເຊື່ອໃນພຣະເຈົ້າເປັນຄັ້ງທຳອິດ? ເຈົ້າໄດ້ມາຮູ້ຈັກຫຍັງແດ່ກ່ຽວກັບພຣະເຈົ້າ? ເຈົ້າໄດ້ປ່ຽນແປງຫຼາຍປານໃດ ຍ້ອນຄວາມເຊື່ອຂອງເຈົ້າທີ່ມີໃນພຣະເຈົ້າ? ມື້ນີ້ ພວກເຈົ້າທັງຫຼາຍລ້ວນແຕ່ຮູ້ແລ້ວວ່າ ຄວາມເຊື່ອໃນພຣະເຈົ້າຂອງມະນຸດ ບໍ່ແມ່ນສະເພາະສຳລັບຄວາມລອດພົ້ນຂອງຈິດວິນຍານ ແລະ ເພື່ອຄວາມສຸກທາງເນື້ອກາຍເທົ່ານັ້ນ ຫຼື ມັນບໍ່ແມ່ນເພື່ອເຮັດໃຫ້ຊີວິດຂອງເຂົາເພີ່ມພູນຂຶ້ນ ຜ່ານການຮັກພຣະເຈົ້າ ແລະ ອື່ນໆ. ເມື່ອເປັນແນວນັ້ນ, ຖ້າເຈົ້າຮັກພຣະເຈົ້າ ເພື່ອຈຸດປະສົງແຫ່ງຄວາມຜາສຸກຂອງເນື້ອໜັງ ຫຼື ຄວາມເພິ່ງພໍໃຈຊົ່ວຂະນະ, ແລ້ວເຖິງແມ່ນວ່າ ທ້າຍທີ່ສຸດແລ້ວ ຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້າ ຈະມາຮອດຈຸດສູງສຸດ ແລະ ພວກເຈົ້າ ກໍບໍ່ຂໍຫຍັງອີກເລີຍ, ຄວາມຮັກທີ່ເຈົ້າສະແຫວງຫາ ຍັງຄົງເປັນຄວາມຮັກທີ່ບໍ່ບໍລິສຸດ ແລະ ບໍ່ເປັນທີ່ພໍໃຈຕໍ່ພຣະເຈົ້າ. ຜູ້ທີ່ໃຊ້ຄວາມຮັກທີ່ມີຕໍ່ພຣະເຈົ້າ ເພື່ອເພີ່ມພູນຊີວິດອັນໜ້າເບື່ອຂອງພວກເຂົາ ແລະເຕີມເຕັມຊ່ອງວ່າງໃນໃຈຂອງພວກເຂົາ ແມ່ນປະເພດຂອງຜູ້ຄົນທີ່ເຫັນແກ່ຕົວສຳລັບຊີວິດອັນແສນສະບາຍ, ບໍ່ແມ່ນຜູ້ທີ່ສະແຫວງຫາຄວາມຮັກພຣະເຈົ້າຢ່າງແທ້ຈິງ. ຄວາມຮັກປະເພດນີ້ ແມ່ນການບັງຄັບ, ມັນເປັນການສະແຫວງຫາຄວາມເພິ່ງພໍໃຈທາງອາລົມ ແລະ ພຣະເຈົ້າບໍ່ຕ້ອງການມັນ. ແລ້ວຄວາມຮັກຂອງເຈົ້າແມ່ນແບບໃດ? ເຈົ້າຮັກພຣະເຈົ້າເພື່ອຫຍັງ? ຕອນນີ້, ຄວາມຮັກອັນແທ້ຈິງ ທີ່ເຈົ້າມີໃຫ້ພຣະເຈົ້ານັ້ນຫຼາຍປານໃດ? ຄວາມຮັກທີ່ພວກເຈົ້າສ່ວນໃຫຍ່ມີ ແມ່ນດັ່ງທີ່ໄດ້ກ່າວໄວ້ກ່ອນໜ້ານີ້. ຄວາມຮັກດັ່ງກ່າວ ພຽງແຕ່ສາມາດຮັກສາສະຖານະພາບໃນປັດຈຸບັນໄວ້ໄດ້ເທົ່ານັ້ນ; ມັນບໍ່ສາມາດເຮັດໃຫ້ເກີດຄວາມໝັ້ນຄົງຊົ່ວນິລັນດອນໄດ້ ຫຼື ບໍ່ສາມາດຝັງຮາກລົງໃນມະນຸດໄດ້. ຄວາມຮັກແບບນີ້ແມ່ນຄືດອກໄມ້ທີ່ເບັ່ງບານ ແລະ ຫ່ຽວແຫ້ງລົງໂດຍທີ່ບໍ່ອອກໝາກ. ເວົ້າອີກຢ່າງໜຶ່ງວ່າ ພາຍຫຼັງທີ່ເຈົ້າໄດ້ຮັກພຣະເຈົ້າຄັ້ງໜຶ່ງໃນແບບດັ່ງກ່າວແລ້ວ ແລະ ບໍ່ມີຜູ້ໃດນຳພາເຈົ້າໄປຕາມເສັ້ນທາງຂ້າງໜ້າ, ເຈົ້າກໍຈະລົ້ມລົງ. ຖ້າວ່າ ເຈົ້າສາມາດຮັກພຣະເຈົ້າໄດ້ ສະເພາະໃນເວລາທີ່ຮັກພຣະເຈົ້າ ແລະ ຫຼັງຈາກນັ້ນ ນິໄສໃນຊີວິດຂອງເຈົ້າຍັງບໍ່ປ່ຽນແປງ, ແລ້ວເຈົ້າກໍ່ຈະສືບຕໍ່ບໍ່ສາມາດຫຼົບໜີຈາກການຫໍ່ຫຸ້ມຂອງອິດທິພົນແຫ່ງຄວາມມືດ, ເຈົ້າຈະສືບຕໍ່ບໍ່ສາມາດຫຼຸດພົ້ນຈາກການຜູກມັດຂອງຊາຕານ ແລະ ການຫຼອກລວງຂອງມັນ. ບໍ່ມີບຸກຄົນໃດເຊັ່ນນີ້ສາມາດຖືກເລືອກໂດຍພຣະເຈົ້າຢ່າງສົມບູນ; ໃນທ້າຍທີ່ສຸດແລ້ວ, ວິນຍານ, ຈິດສຳນຶກ ແລະ ຮ່າງກາຍຂອງພວກເຂົາ ກໍຍັງຈະເປັນຂອງຊາຕານ. ສິ່ງດັ່ງກ່າວນີ້ບໍ່ແມ່ນເລື່ອງທີ່ຕ້ອງສົງໄສ. ມະນຸດທັງໝົດທີ່ບໍ່ໄດ້ຖືກເລືອກໂດຍພຣະເຈົ້າຢ່າງສົມບູນ ກໍຈະກັບຄືນໄປສູ່ສະຖານທີ່ເດີມຂອງຕົນ ຊຶ່ງນັ້ນກໍແມ່ນການກັບໄປຫາຊາຕານ ແລະ ພວກເຂົາກໍຈະລົງໄປໃນບຶງໄຟນະຣົກ ແລະ ກຳມະຖັນເຜົາໄໝ້ ເພື່ອຮັບເອົາການລົງໂທດໃນຂັ້ນຕໍ່ໄປຈາກພຣະເຈົ້າ. ຜູ້ທີ່ຖືກພຣະເຈົ້າຮັບເອົາແມ່ນຜູ້ທີ່ປະຖິ້ມຊາຕານ ແລະ ໂຕນໜີອອກຈາກອານາເຂດຂອງຊາຕານ. ພວກເຂົາຈະຖືກນັບທ່າມກາງປະຊາຊົນຂອງອານາຈັກຢ່າງເປັນທາງການ. ນີ້ແມ່ນວິທີການເຂົ້າເປັນປະຊາຊົນຂອງອານາຈັກ. ເຈົ້າຍິນດີທີ່ຈະກາຍມາເປັນຄົນປະເພດນີ້ບໍ? ເຈົ້າຍິນດີທີ່ຖືກຮັບເອົາໂດຍພຣະເຈົ້າບໍ? ເຈົ້າຍິນດີຈະ

ໂຕນໜີຈາກອານາເຂດຂອງຊາຕານ ແລ້ວກັບຄືນໄປຫາພຣະເຈົ້າບໍ? ຕອນນີ້ ເຈົ້າເປັນຂອງຊາຕານ ຫຼື ເຈົ້າຖືກນັບເປັນປະຊາຊົນຂອງອານາຈັກ? ສິ່ງທັງຫຼາຍນີ້ ຄວນຈະແຈ້ງແລ້ວ ແລະ ບໍ່ຈຳເປັນຕ້ອງມີຄຳອະທິບາຍໃດໆຕື່ມອີກ.

ໃນອະດີດຜ່ານມາ, ຫຼາຍຄົນໄດ້ສະແຫວງຫາຄວາມທະເຍີທະຍານ ແລະ ຄວາມຄິດທີ່ຕື່ນເຕັ້ນ, ພວກເຂົາສະແຫວງຫາ ເນື່ອງຈາກມັນເປັນຄວາມຫວັງຂອງພວກເຂົາເອງ. ໃຫ້ເຮົາວາງບັນຫາດັ່ງກ່າວໄວ້ກ່ອນໃນຂະນະນີ້. ໃນປັດຈຸບັນ, ສິ່ງສຳຄັນຫຼັກແມ່ນການຊອກຫາວິທີທາງປະຕິບັດ ເພື່ອຊ່ວຍພວກເຈົ້າແຕ່ລະຄົນ ໃຫ້ສາມາດຮັກສາສະພາບອັນປົກກະຕິຕອນຢູ່ຕໍ່ໜ້າພຣະເຈົ້າ ແລ້ວຈຶ່ງຄ່ອຍໆຫຼຸດພົ້ນອອກຈາກອິດທິພົນຂອງຊາຕານ ເພື່ອວ່າ ພວກເຈົ້າຈະໄດ້ຖືກຮັບເອົາໂດຍພຣະເຈົ້າ ແລະ ດຳລົງຊີວິດຢູ່ໃນໂລກ ຕາມທີ່ພຣະເຈົ້າຮ້ອງຂໍຈາກເຈົ້າ. ພຽງທາງນີ້ເທົ່ານັ້ນທີ່ເຈົ້າຈະສາມາດເຕີມເຕັມພຣະປະສົງຂອງພຣະເຈົ້າໄດ້. ຫຼາຍຄົນເຊື່ອໃນພຣະເຈົ້າ, ແຕ່ກໍຍັງບໍ່ທັນຮູ້ວ່າ ພຣະເຈົ້າປະສົງສິ່ງໃດ ຫຼື ຊາຕານຕ້ອງການຫຍັງ. ພວກເຂົາເຊື່ອຢ່າງສັບສົນ, ພຽງແຕ່ໄຫຼໄປຕາມກະແສ ແລະ ຈຶ່ງບໍ່ເຄີຍໄດ້ມີຊີວິດປົກກະຕິແບບຊາວຄຣິສຕຽນ; ມີສິ່ງໃດເພີ່ມເຕີມອີກ, ພວກເຂົາບໍ່ເຄີຍໄດ້ມີຄວາມສຳພັນສ່ວນຕົວແບບປົກກະຕິ, ຍິ່ງໄກທີ່ຈະມີຄວາມສຳພັນກັບພຣະເຈົ້າ. ຈາກນີ້ ມັນສາມາດເຫັນໄດ້ວ່າ ບັນຫາ ແລະ ຄວາມຜິດພາດຂອງມະນຸດ ແລະ ປັດໃຈອື່ນໆ ທີ່ຂັດຂວາງຕໍ່ຄວາມປະສົງຂອງພຣະເຈົ້ານັ້ນແມ່ນມີຫຼາຍ. ນີ້ແມ່ນພຽງພໍແລ້ວ ທີ່ຈະພິສູດວ່າ ມະນຸດຍັງບໍ່ໄດ້ຢູ່ໃນເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າທີ່ຖືກຕ້ອງ ຫຼື ຍັງບໍ່ໄດ້ເຂົ້າໄປໃນປະສົບການທີ່ແທ້ຈິງຂອງຊີວິດມະນຸດ. ດັ່ງນັ້ນ, ການວາງຕົນຢູ່ໃນເສັ້ນທາງທີ່ຖືກຕ້ອງແມ່ນຫຍັງ? ການວາງຕົນຢູ່ໃນເສັ້ນທາງທີ່ຖືກຕ້ອງ ໝາຍຄວາມວ່າ ເຈົ້າສາມາດເຮັດໃຫ້ຈິດໃຈສະຫງົບເວລາຢູ່ຕໍ່ໜ້າພຣະເຈົ້າຢູ່ຕະຫຼອດເວລາ ແລະ ເພີດເພີນໃນການສົນທະນາກັບພຣະເຈົ້າປົກກະຕິ, ແລ້ວຄ່ອຍໆເຂົ້າມາຮູ້ຈັກວ່າ ມະນຸດຍັງຂາດຫຍັງ ແລະ ຮັບເອົາຄວາມຮູ້ອັນເລິກເຊິ່ງຂອງພຣະເຈົ້າຢ່າງຊ້າໆ. ຈາກນີ້ໄປ, ວິນຍານຂອງເຈົ້າຈະໄດ້ຮັບຄວາມຮູ້ໃໝ່ ແລະ ແສງສະຫວ່າງໃໝ່ທຸກມື້. ກໍຈະເຫັນສິ່ງໃໝ່ໆໃນແຕ່ລະວັນ ແລະ ຮູ້ແຈ້ງຕໍ່ວິນຍານຂອງເຈົ້າ; ເຈົ້າສະແຫວງຫາຫຼາຍຍິ່ງຂຶ້ນ ແລະ ຫຼາຍຍິ່ງຂຶ້ນ ເພື່ອເຂົ້າເຖິງຄວາມຈິງ. ໃນແຕ່ລະວັນ, ຈະມີແສງສະຫວ່າງໃໝ່ ແລະ ຄວາມເຂົ້າໃຈອັນໃໝ່. ຜ່ານເສັ້ນທາງນີ້, ເຈົ້າກໍຈະຄ່ອຍໆຫຼຸດພົ້ນອອກຈາກອິດທິພົນຂອງຊາຕານ ແລະ ຊີວິດຂອງເຈົ້າກໍຈະເຕີບໃຫຍ່ຂຶ້ນກວ່າເກົ່າ. ມະນຸດຜູ້ທີ່ເປັນດັ່ງນີ້ແມ່ນໄດ້ເຂົ້າມາສູ່ເສັ້ນທາງທີ່ຖືກຕ້ອງ. ປະເມີນປະສົບການຕົວຈິງຂອງເຈົ້າ ແລະ ພິຈາລະນາເສັ້ນທາງທີ່ເຈົ້າໄດ້ເລືອກໃນຄວາມເຊື່ອຂອງເຈົ້າ: ເມື່ອເຈົ້າຍົກສິ່ງເຫຼົ່ານັ້ນເພື່ອທຽບໃສ່ສິ່ງທີ່ຖືກອະທິບາຍຢູ່ຂ້າງເທິງ, ເຈົ້າເຫັນວ່າຕົນເອງຢູ່ເທິງເສັ້ນທາງທີ່ຖືກຕ້ອງບໍ? ໃນກໍລະນີໃດທີ່ເຈົ້າໄດ້ຫຼຸດພົ້ນອອກຈາກໂສ້ຂອງຊາຕານ ແລະ ຈາກອິດທິພົນຂອງຊາຕານ? ຖ້າຫາກເຈົ້າຍັງບໍ່ທັນໄດ້ວາງຕົນໃຫ້ຢູ່ໃນເສັ້ນທາງທີ່ຖືກຕ້ອງ, ສາຍພົວພັນຂອງເຈົ້າກັບຊາຕານກໍ່ຍັງບໍ່ໄດ້ຖືກຕັດຂາດ. ດັ່ງນັ້ນ, ການສະແຫວງຫາຄວາມຮັກຕໍ່ພຣະເຈົ້າ ຈະສາມາດສົ່ງຜົນໃຫ້ເກີດຄວາມຮັກທີ່ແທ້ຈິງ, ມີການທຸ້ມເທ ແລະ ບໍລິສຸດໄດ້ບໍ? ເຈົ້າບອກວ່າ ຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້ານັ້ນ ບໍ່ປ່ຽນແປງ ແລະ ຈິງໃຈ, ແຕ່ເຈົ້າກໍຍັງບໍ່ທັນຫຼຸດພົ້ນອອກຈາກໂສ້ຂອງຊາຕານ. ບໍ່

ແມ່ນວ່າ ເຈົ້າກຳລັງຫຼອກລວງພຣະເຈົ້າບໍ? ຖ້າຫາກເຈົ້າປະສົງທີ່ຈະບັນລຸສະຖານະທີ່ຄວາມຮັກຂອງເຈົ້າສຳລັບພຣະເຈົ້າປາສະຈາກສິ່ງປົນເປື້ອນ ແລະ ເຈົ້າກໍຫວັງທີ່ຈະຖືກຮັບເອົາໂດຍພຣະເຈົ້າຢ່າງສົມບູນ ແລະ ກາຍມາເປັນປະຊາຊົນຢູ່ໃນອານາຈັກ, ເຈົ້າກໍຕ້ອງວາງຕົນເອງໃຫ້ຢູ່ໃນເສັ້ນທາງທີ່ຖືກຕ້ອງ.

# ກ່ຽວກັບຂັ້ນຕອນຂອງພາລະກິດຂອງພຣະເຈົ້າ

ຈາກພາຍນອກ, ມັນເບິ່ງຄືວ່າ ຂັ້ນຕອນຂອງພາລະກິດໃນປັດຈຸບັນຂອງພຣະເຈົ້າໄດ້ສຳເລັດລົງແລ້ວ ແລະ ມະນຸດໄດ້ປະສົບກັບການພິພາກສາ, ການຕີສອນ, ການຂ້ຽນຕີ ແລະ ການຫຼໍ່ຫຼອມຕາມພຣະທຳຂອງພຣະອົງ ແລະ ໄດ້ປະສົບຜ່ານຂັ້ນຕອນ ເຊັ່ນ: ການທົດລອງຂອງຜູ້ບໍລິການ, ການຫຼໍ່ຫຼອມໃນເວລາການຕີສອນ, ການທົດລອງແຫ່ງຄວາມຕາຍ, ການທົດລອງດ້ວຍການປຽບທຽບ ແລະ ໃນເວລາແຫ່ງຄວາມຮັກຂອງພຣະເຈົ້າ. ເຖິງແມ່ນວ່າຜູ້ຄົນໄດ້ຜ່ານຄວາມທຸກທໍລະມານຢ່າງຍິ່ງໃຫຍ່ໃນແຕ່ລະຂັ້ນຕອນ ພວກເຂົາກໍຍັງບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າ. ໃຫ້ພິຈາລະນາການທົດລອງຂອງຜູ້ບໍລິການ, ຕົວຢ່າງເຊັ່ນ: ພວກເຂົາຍັງບໍ່ມີຄວາມຊັດເຈນກ່ຽວກັບສິ່ງທີ່ພວກເຂົາໄດ້ຮັບ, ສິ່ງທີ່ພວກເຂົາໄດ້ມາຮູ້ຈັກ ແລະ ຜົນທີ່ພຣະເຈົ້າຕ້ອງການຈະບັນລຸ. ເມື່ອຄວາມໄວຂອງພາລະກິດຂອງພຣະເຈົ້າ, ມັນເບິ່ງຄືວ່າມະນຸດບໍ່ສາມາດຕາມທັນຄວາມໄວຂອງມື້ນີ້. ມັນສາມາດເຫັນໄດ້ຈາກເລື່ອງນັ້ນວ່າ ທຳອິດ ພຣະເຈົ້າໄດ້ເປີດເຜີຍຂັ້ນຕອນເຫຼົ່ານີ້ຂອງພາລະກິດຂອງພຣະອົງຕໍ່ມະນຸດ ແລະ ແທນທີ່ຕ້ອງບັນລຸລະດັບທີ່ມະນຸດສາມາດຈິນຕະນາການໄດ້ໃນຂັ້ນຕອນໃດໜຶ່ງ, ພຣະອົງພະຍາຍາມໃຊ້ວິທີການນີ້ເພື່ອອະທິບາຍບັນຫາ. ເພື່ອໃຫ້ພຣະເຈົ້າເຮັດໃຫ້ຜູ້ໃດຜູ້ໜຶ່ງສົມບູນ ເພື່ອໃຫ້ພຣະອົງຮັບເອົາຢ່າງແທ້ຈິງ, ພຣະອົງຕ້ອງດຳເນີນຂັ້ນຕອນຕ່າງໆທີ່ຢູ່ຂ້າງເທິງນີ້. ເປົ້າໝາຍຂອງການປະຕິບັດພາລະກິດນີ້ແມ່ນເພື່ອສະແດງໃຫ້ເຫັນວ່າ ພຣະເຈົ້າຕ້ອງດຳເນີນຂັ້ນຕອນໃດເພື່ອເຮັດໃຫ້ກຸ່ມຄົນໃດໜຶ່ງສົມບູນ. ສະນັ້ນ ເມື່ອເບິ່ງຈາກທາງນອກ, ຂັ້ນຕອນຂອງພາລະກິດຂອງພຣະເຈົ້າແມ່ນໄດ້ສຳເລັດໄປແລ້ວ, ແຕ່ໂດຍເນື້ອແທ້ແລ້ວ ພຣະອົງຫາກໍ່ໄດ້ເລີ່ມຕົ້ນການເຮັດໃຫ້ມະນຸດຊາດສົມບູນຢ່າງເປັນທາງການ. ຜູ້ຄົນຄວນຊັດເຈນກ່ຽວກັບສິ່ງນີ້ ນັ້ນກໍຄື ຂັ້ນຕອນຂອງພາລະກິດຂອງພຣະອົງທີ່ໄດ້ສຳເລັດ, ແຕ່ພາລະກິດຍັງບໍ່ໄດ້ມາເຖິງຈຸດສິ້ນສຸດ. ແຕ່ໃນແນວຄິດຂອງພວກເຂົາ, ພວກເຂົາເຊື່ອຈາກວ່າ ຂັ້ນຕອນທັງໝົດຂອງພາລະກິດຂອງພຣະເຈົ້າໄດ້ຖືກເປີດເຜີຍຕໍ່ມະນຸດ ແລະ ສະນັ້ນ ບໍ່ຕ້ອງສົງໄສເລີຍວ່າພາລະກິດຂອງພຣະອົງໄດ້ສິ້ນສຸດແລ້ວ. ວິທີການເບິ່ງສິ່ງຕ່າງໆຜິດພາດຢ່າງສິ້ນເຊີງ. ພາລະກິດຂອງພຣະເຈົ້າກົງກັນຂ້າມກັບແນວຄວາມຄິດຂອງຜູ້ຄົນ ແລະ ໂຈມຕີແນວຄິດດັ່ງກ່າວໃນທຸກລັກສະນະ; ໂດຍສະເພາະແລ້ວ ຂັ້ນຕອນຂອງພາລະກິດຂອງພຣະອົງບໍ່ສອດຄ່ອງກັບແນວຄວາມຄິດຂອງມະນຸດ. ທຸກສິ່ງນີ້ສະແດງໃຫ້ເຫັນສະຕິປັນຍາຂອງພຣະເຈົ້າ. ສາມາດເຫັນໄດ້ຈາກສິ່ງນັ້ນວ່າ ແນວຄວາມຄິດຂອງຜູ້ຄົນກໍ່ໃຫ້ເກີດການຂັດຂວາງໃນທຸກທຸກດ້ານ ແລະ ພຣະເຈົ້າໂຈມຕີກັບໃສ່ທຸກສິ່ງທີ່ມະນຸດຈິນຕະນາການ ເຊິ່ງຊັດເຈນຂຶ້ນໃນລະຫວ່າງປະສົບການຕົວຈິງ. ທຸກຄົນຄິດວ່າ ພຣະເຈົ້າປະຕິບັດພາລະກິດໄວເກີນໄປ ແລະ ພາລະກິດຂອງພຣະເຈົ້າໄດ້ສິ້ນສຸດໄປກ່ອນທີ່ພວກເຂົາຈະຮູ້, ກ່ອນທີ່ພວກເຂົາຈະໄດ້ຮັບຄວາມເຂົ້າໃຈ ແລະ ໃນຂະນະທີ່ພວກເຂົາຍັງຢູ່ໃນສະພາວະທີ່ສັບສົນ ທຸກຂັ້ນຕອນຂອງພາລະກິດຂອງພຣະອົງແມ່ນເປັນແບບນີ້. ຜູ້ຄົນສ່ວນໃຫຍ່ເຊື່ອວ່າ ພຣະເຈົ້າຫຼອກລໍ້ຜູ້ຄົນ, ແຕ່ວ່າຈຸດປະສົງທີ່ຢູ່ເບື້ອງຫຼັງພາລະກິດຂອງພຣະອົງບໍ່ແມ່ນແນວນັ້ນ. ວິທີການປະຕິບັດພາລະກິດຂອງພຣະອົງ

ແມ່ນຜ່ານການຄົ້ນຄິດຕຶກຕອງເປັນຢ່າງດີ, ທຳອິດແມ່ນຄືກັບການເບິ່ງດອກໄມ້ໃນຂະນະທີ່ຂີ່ຢູ່ເທິງຫຼັງມ້າ, ຫຼັງຈາກນັ້ນກໍເຂົ້າສູ່ລາຍລະອຽດ ແລະ ຈາກນັ້ນແມ່ນກັ່ນຕອງລາຍລະອຽດເຫຼົ່ານີ້ຢ່າງຄົບຖ້ວນ. ຜູ້ຄົນພະຍາຍາມຫຼອກລວງພຣະເຈົ້າ ໂດຍຄິດວ່າຖ້າພວກເຂົາສາມາດໃຊ້ຊີວິດໄປຈົນເຖິງຈຸດໃດໜຶ່ງ, ພຣະເຈົ້າກໍຈະພໍໃຈ. ໃນຄວາມຈິງແລ້ວ, ພຣະເຈົ້າຈະສາມາດເພິ່ງພໍໃຈກັບຄວາມພະຍາຍາມຂອງມະນຸດໃນການໃຊ້ຊີວິດໄປແຕ່ລະມື້ໄດ້ແນວໃດ? ເພື່ອໃຫ້ບັນລຸຜົນດີທີ່ສຸດ, ພຣະເຈົ້າປະຕິບັດພາລະກິດໂດຍຜ່ານວິທີການທີ່ເຮັດໃຫ້ຜູ້ຄົນປະຫຼາດໃຈ, ໂດຍການໂຈມຕີໃນຂະນະທີ່ພວກເຂົາບໍ່ຮູ້ສຶກຕົວ; ສິ່ງນີ້ຈະເຮັດໃຫ້ພວກເຂົາມີຄວາມຮູ້ຫຼາຍຂຶ້ນກ່ຽວກັບສະຕິປັນຍາຂອງພຣະອົງ ແລະ ເຂົ້າໃຈຄວາມຊອບທຳ, ສະຫງ່າລາສີ ແລະ ອຸປະນິໄສທີ່ບໍ່ສາມາດລ່ວງເກີນໄດ້ຂອງພຣະອົງຫຼາຍຂຶ້ນ.

ມື້ນີ້, ພຣະເຈົ້າໄດ້ເລີ່ມຕົ້ນການເຮັດໃຫ້ຜູ້ຄົນສົມບູນຢ່າງເປັນທາງການແລ້ວ. ເພື່ອທີ່ຈະຖືກເຮັດໃຫ້ສົມບູນ, ຜູ້ຄົນຕ້ອງໄດ້ຜ່ານການເປີດເຜີຍ, ການພິພາກສາ ແລະ ການຕີສອນໂດຍພຣະທຳຂອງພຣະເຈົ້າ, ພວກເຂົາຕ້ອງພະເຊີນກັບການທົດລອງ ແລະ ການຫຼໍ່ຫຼອມຕາມພຣະທຳຂອງພຣະອົງ (ເຊັ່ນການທົດລອງຂອງຜູ້ບໍລິການ) ແລະ ພວກເຂົາຕ້ອງສາມາດອົດທົນກັບການທົດລອງແຫ່ງຄວາມຕາຍ. ນັ້ນໝາຍຄວາມວ່າ ທ່າມກາງການພິພາກສາ, ການຕີສອນ ແລະ ການທົດລອງຂອງພຣະເຈົ້າ, ຄົນທີ່ປະຕິບັດຕາມຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງຈະສາມາດສັນລະເສີນພຣະເຈົ້າຈາກສ່ວນເລິກໃນຫົວໃຈຂອງພວກເຂົາ ແລະ ສາມາດເຊື່ອຟັງພຣະເຈົ້າໄດ້ຢ່າງສົມບູນ ແລະ ປະຖິ້ມຕົນເອງ, ແລ້ວຮັກພຣະເຈົ້າດ້ວຍຫົວໃຈທີ່ຈິງໃຈ, ໃຈດຽວ ແລະ ດ້ວຍຄວາມບໍລິສຸດ; ຄົນດັ່ງກ່າວແມ່ນບຸກຄົນທີ່ສົມບູນ ແລະ ມັນແມ່ນພາລະກິດທີ່ພຣະເຈົ້າຕ້ອງການເຮັດ ແລະ ພາລະກິດທີ່ພຣະເຈົ້າຕ້ອງການໃຫ້ສຳເລັດ. ຜູ້ຄົນບໍ່ສາມາດດ່ວນສະຫຼຸບກ່ຽວກັບວິທີການທີ່ພຣະເຈົ້າປະຕິບັດພາລະກິດ. ພວກເຂົາຄວນພຽງແຕ່ສະແຫວງຫາທາງເຂົ້າສູ່ຊີວິດ. ນີ້ແມ່ນພື້ນຖານ. ຢ່າກວດສອບຢ່າງເລິກເຊິ່ງກ່ຽວກັບວິທີການປະຕິບັດພາລະກິດຂອງພຣະເຈົ້າ; ການເຮັດແບບນັ້ນຈະເປັນອຸປະສັກຕໍ່ຄວາມຈະເລີນໃນອະນາຄົດຂອງເຈົ້າ. ເຈົ້າເຫັນວິທີການປະຕິບັດພາລະກິດຂອງພຣະອົງຫຼາຍສໍ່າໃດ? ເຈົ້າເປັນຄົນເຊື່ອຟັງຫຼາຍສໍ່າໃດ? ເຈົ້າໄດ້ຮັບຫຼາຍສໍ່າໃດຈາກແຕ່ລະວິທີການປະຕິບັດພາລະກິດຂອງພຣະອົງ? ເຈົ້າເຕັມໃຈທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າບໍ? ເຈົ້າປາຖະໜາທີ່ຈະເປັນຄົນທີ່ສົມບູນບໍ? ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນ ສິ່ງທີ່ພວກເຈົ້າຄວນເຂົ້າໃຈຢ່າງຊັດເຈນ ແລະ ເຂົ້າຫາ.

# ມະນຸດທີ່ເສື່ອມຊາມ
# ບໍ່ສາມາດເປັນຕົວແທນພຣະເຈົ້າໄດ້

ມະນຸດໄດ້ດຳລົງຊີວິດຢູ່ພາຍໃຕ້ການປົກຄຸມຂອງອິດທິພົນແຫ່ງຄວາມມືດ, ຕົກເປັນທາດອິດທິພົນຂອງຊາຕານທີ່ບໍ່ສາມາດຫຼົບໜີໄດ້. ຫຼັງຈາກທີ່ອຸປະນິໄສຂອງມະນຸດໄດ້ຜ່ານການປຸງແຕ່ງໂດຍຊາຕານ ມະນຸດກໍຍິ່ງເສື່ອມຊາມຂຶ້ນເລື້ອຍໆ. ມັນສາມາດເວົ້າໄດ້ວ່າ ມະນຸດໄດ້ດຳລົງຊີວິດຢູ່ທ່າມກາງອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມຂອງເຂົາຢູ່ສະເໝີ ແລະ ບໍ່ສາມາດຮັກພຣະເຈົ້າຢ່າງແທ້ຈິງ. ເມື່ອເປັນດັ່ງນັ້ນ ຖ້າມະນຸດປາຖະໜາທີ່ຈະຮັກພຣະເຈົ້າ, ເຂົາຕ້ອງປົດຖິ້ມຄວາມຄິດທີ່ວ່າຕົວເອງຊອບທຳ, ຄວາມຄິດທີ່ວ່າຕົວເອງສຳຄັນ, ຄວາມຈອງຫອງ, ຄວາມອວດດີ ແລະ ສິ່ງອື່ນໆທີ່ຄ້າຍຄືກັນ ເຊິ່ງທຸກສິ່ງນີ້ແມ່ນເປັນອຸປະນິໄສຂອງຊາຕານ. ຖ້າບໍ່ດັ່ງນັ້ນ ຄວາມຮັກຂອງພວກເຂົາກໍເປັນຄວາມຮັກທີ່ບໍ່ບໍລິສຸດ, ຄວາມຮັກທີ່ຊົ່ວຮ້າຍ ແລະ ເປັນຄວາມຮັກທີ່ບໍ່ສາມາດຮັບເອົາການເຫັນດີຂອງພຣະເຈົ້າຢ່າງແນ່ນອນ. ຫາກປາສະຈາກການຖືກເຮັດໃຫ້ສົມບູນ, ຖືກຈັດການ, ແຕກຫັກ, ລິຮານ, ລົງວິໄນ, ຕີສອນ ຫຼື ຫຼໍ່ຫຼອມໂດຍພຣະວິນຍານບໍລິສຸດໂດຍກົງ, ບໍ່ມີໃຜສາມາດຮັກພຣະເຈົ້າໄດ້ຢ່າງແທ້ຈິງ. ຖ້າເຈົ້າເວົ້າວ່າ ສ່ວນໜຶ່ງຂອງອຸປະນິໄສຂອງເຈົ້າເປັນຕົວແທນໃຫ້ກັບພຣະເຈົ້າ ແລະ ດ້ວຍເຫດນັ້ນ ເຈົ້າກໍສາມາດຮັກພຣະເຈົ້າໄດ້ຢ່າງແທ້ຈິງ, ເຈົ້າແມ່ນເປັນຄົນທີ່ກ່າວຄຳເວົ້າແບບຈອງຫອງ ແລະ ເປັນມະນຸດທີ່ໄຮ້ສາລະທີ່ສຸດ. ມະນຸດປະເພດນີ້ຄືອັກຄະເທວະດາ! ທຳມະຊາດທີ່ມີມາແຕ່ເກີດຂອງມະນຸດບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ໂດຍກົງ. ມະນຸດຕ້ອງປະຖິ້ມທຳມະຊາດທີ່ມີມາແຕ່ເກີດຂອງເຂົາໂດຍຜ່ານການຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ແລະ ຫຼັງຈາກນັ້ນ ມີພຽງແຕ່ການເອົາໃຈໃສ່ຄວາມປະສົງຂອງພຣະເຈົ້າ, ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນກໍຄືການປະສົບພາລະກິດຂອງພຣະວິນຍານບໍລິສຸດ, ການດຳລົງຊີວິດຂອງເຂົາຈຶ່ງສາມາດໄດ້ຮັບການເຫັນດີຈາກພຣະເຈົ້າໄດ້. ບໍ່ມີໃຜຜູ້ເຊິ່ງດຳລົງຊີວິດຢູ່ໃນເນື້ອໜັງສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ໂດຍກົງ ນອກຈາກເຂົາຈະເປັນມະນຸດທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດ. ເຖິງຢ່າງໃດກໍຕາມ ແມ່ນແຕ່ສຳລັບຄົນປະເພດນີ້, ອຸປະນິໄສຂອງເຂົາ ແລະ ສິ່ງທີ່ເຂົາດຳລົງຊີວິດຕາມກໍບໍ່ສາມາດເວົ້າໄດ້ທັງໝົດວ່າເປັນຕົວແທນໃຫ້ກັບພຣະເຈົ້າ; ຄົນໃດໜຶ່ງສາມາດພຽງແຕ່ເວົ້າໄດ້ວ່າ ສິ່ງທີ່ເຂົາດຳລົງຊີວິດຕາມນັ້ນແມ່ນໄດ້ຮັບການຊີ້ນຳຈາກພຣະວິນຍານບໍລິສຸດເທົ່ານັ້ນ. ອຸປະນິໄສຂອງມະນຸດປະເພດດັ່ງກ່າວບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້.

ເຖິງແມ່ນວ່າ ອຸປະນິໄສຂອງມະນຸດໄດ້ຮັບການດົນບັນດານຈາກພຣະເຈົ້າ ເຊິ່ງນີ້ເປັນສິ່ງທີ່ບໍ່ຕ້ອງສົງໄສ ແລະ ສາມາດຖືໄດ້ວ່າເປັນສິ່ງບວກ ແຕ່ມັນໄດ້ຖືກດຳເນີນການໂດຍຊາຕານ. ດ້ວຍເຫດນັ້ນ ອຸປະນິໄສທັງໝົດຂອງມະນຸດຈຶ່ງເປັນອຸປະນິໄສຂອງຊາຕານ. ບາງຄົນອາດເວົ້າວ່າ ໂດຍອຸປະນິໄສຂອງພຣະອົງແລ້ວ ພຣະເຈົ້າກົງໄປກົງມາໃນການກະທຳທຸກສິ່ງທຸກຢ່າງ ແລະ ພວກເຂົາກໍປະພຶດຕົວແບບນີ້ເຊັ່ນກັນ, ພວກເຂົາກໍມີລັກສະນະແບບນີ້ເຊັ່ນກັນ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງເວົ້າໄດ້ວ່າ ອຸປະນິໄສ

ແບບນີ້ຂອງພວກເຂົາເປັນຕົວແທນໃຫ້ກັບພຣະເຈົ້າໄດ້. ນີ້ແມ່ນມະນຸດປະເພດໃດ? ອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ບໍ? ໃຜກໍຕາມທີ່ປະກາດວ່າ ອຸປະນິໄສຂອງພວກເຂົາເປັນຕົວແທນໃຫ້ກັບພຣະເຈົ້າ, ຄົນນັ້ນແມ່ນໝິ່ນປະໝາດພຣະເຈົ້າ ແລະ ດູຖູກພຣະວິນຍານບໍລິສຸດ! ວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດສະແດງໃຫ້ເຫັນວ່າ ພາລະກິດທີ່ພຣະເຈົ້າປະຕິບັດເທິງແຜ່ນດິນໂລກແມ່ນເພື່ອເອົາຊະນະເທົ່ານັ້ນ. ດັ່ງນັ້ນ ອຸປະນິໄສຊາຕານທີ່ເສື່ອມຊາມແບບຊາຕານຫຼາຍຢ່າງຂອງມະນຸດຍັງບໍ່ໄດ້ຮັບການຊໍາລະລ້າງເທື່ອ ແລະ ສິ່ງທີ່ເຂົາດໍາລົງຊີວິດຕາມຍັງເປັນພາບລັກຂອງຊາຕານ. ມັນແມ່ນສິ່ງທີ່ມະນຸດເຊື່ອວ່າດີ ແລະ ເປັນຕົວແທນໃຫ້ກັບການກະທໍາຂອງເນື້ອໜັງຂອງມະນຸດ ຫຼື ຖ້າຈະເວົ້າໃຫ້ຖືກຕ້ອງຫຼາຍກວ່ານັ້ນກໍຄື ມັນເປັນຕົວແທນໃຫ້ກັບຊາຕານ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ຢ່າງແນ່ນອນ. ເຖິງແມ່ນວ່າ ຄົນໃດໜຶ່ງໄດ້ຮັກພຣະເຈົ້າຈົນເຖິງຂັ້ນທີ່ວ່າພວກເຂົາສາມາດຊື່ນຊົມຊີວິດແຫ່ງສະຫວັນເທິງແຜ່ນດິນໂລກ ທີ່ສາມາດກ່າວປະໂຫຍກທີ່ວ່າ: “ໂອ ພຣະເຈົ້າ! ຂ້ານ້ອຍບໍ່ສາມາດຮັກພຣະອົງໄດ້ຢ່າງພຽງພໍ” ແລະ ໄດ້ເຂົ້າເຖິງຂອບເຂດທີ່ສູງສຸດ, ມັນກໍຍັງບໍ່ສາມາດເວົ້າໄດ້ວ່າພວກເຂົາດໍາລົງຊີວິດຕາມພຣະເຈົ້າ ຫຼື ເປັນຕົວແທນໃຫ້ກັບພຣະເຈົ້າໄດ້, ຍ້ອນແກ່ນແທ້ຂອງມະນຸດບໍ່ຄືກັບແກ່ນແທ້ຂອງພຣະເຈົ້າ ແລະ ມະນຸດບໍ່ສາມາດດໍາລົງຊີວິດຕາມພຣະເຈົ້າໄດ້, ຢ່າວ່າແຕ່ກາຍມາເປັນພຣະເຈົ້າເລີຍ. ສິ່ງທີ່ພຣະວິນຍານບໍລິສຸດໄດ້ຊີ້ນໍາໃຫ້ມະນຸດດໍາລົງຊີວິດຕາມນັ້ນ ແມ່ນພຽງແຕ່ອີງຕາມສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດເທົ່ານັ້ນ.

ການປະຕິບັດ ແລະ ການກະທໍາທຸກຢ່າງຂອງຊາຕານແມ່ນໄດ້ສະແດງອອກໃນມະນຸດ. ໃນປັດຈຸບັນ ການປະຕິບັດ ແລະ ການກະທໍາທຸກຢ່າງຂອງມະນຸດແມ່ນການສະແດງອອກຂອງຊາຕານ ແລະ ດ້ວຍເຫດນີ້ ຈຶ່ງບໍ່ສາມາດເປັນຕົວແທນພຣະເຈົ້າໄດ້. ມະນຸດຄືພາບຫຼັກຂອງຊາຕານ ແລະ ອຸປະນິໄສຂອງເຂົາບໍ່ສາມາດເປັນຕົວແທນອຸປະນິໄສຂອງພຣະເຈົ້າໄດ້. ມະນຸດບາງຄົນມີລັກສະນະທີ່ດີ, ພຣະເຈົ້າອາດປະຕິບັດພາລະກິດບາງຢ່າງຜ່ານລັກສະນະດັ່ງກ່າວຂອງມະນຸດ ແລະ ພາລະກິດທີ່ພວກເຂົາປະຕິບັດແມ່ນໄດ້ຮັບການຊີ້ນໍາຈາກພຣະວິນຍານບໍລິສຸດ. ເຖິງຢ່າງໃດກໍຕາມ ອຸປະນິໄສຂອງພວກເຂົາແມ່ນບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້. ພາລະກິດທີ່ພຣະເຈົ້າປະຕິບັດໃນພວກເຂົາບໍ່ມີຫຍັງຫຼາຍໄປກວ່າການປະຕິບັດພາລະກິດຮ່ວມ ແລະ ຂະຫຍາຍສິ່ງທີ່ມີຢູ່ພາຍໃນພວກເຂົາ. ຈະເປັນພວກປະກາດພຣະທໍາໃນຍຸກອະດີດ ຫຼື ມະນຸດທີ່ພຣະເຈົ້າໃຊ້, ບໍ່ມີໃຜສາມາດເປັນຕົວແທນໃຫ້ກັບພຣະອົງໄດ້ໂດຍກົງ. ຜູ້ຄົນມາຮູ້ຈັກຮັກພຣະເຈົ້າພຽງແຕ່ພາຍໃຕ້ສະຖານະການບີບບັງຄັບເທົ່ານັ້ນ ແລະ ບໍ່ມີໃຜພະຍາຍາມທີ່ຈະຮ່ວມມືດ້ວຍຄວາມສະໝັກໃຈຂອງພວກເຂົາເອງ. ສິ່ງທີ່ເປັນດ້ານບວກຄືຫຍັງ? ທຸກໆສິ່ງທີ່ມາຈາກພຣະເຈົ້າໂດຍກົງຄືສິ່ງທີ່ເປັນດ້ານບວກ. ເຖິງຢ່າງໃດກໍຕາມ, ອຸປະນິໄສຂອງມະນຸດແມ່ນຖືກຄອບງໍາໂດຍຊາຕານ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້. ມີພຽງແຕ່ຄວາມຮັກ, ຄວາມປະສົງເພື່ອທົນທຸກທໍລະມານ, ຄວາມຊອບທໍາ, ຄວາມຍິນຍອມ, ຄວາມອ່ອນນ້ອມຖ່ອມຕົນ ແລະ ຄວາມລີ້ລັບຂອງພຣະເຈົ້າທີ່ບັງເກີດເປັນມະນຸດເປັນຕົວແທນໃຫ້ກັບພຣະເຈົ້າໂດຍກົງ. ນີ້ເປັນເພາະວ່າ ເມື່ອພຣະອົງມາ, ພຣະອົງປາສະຈາກທໍາມະຊາດແຫ່ງຄວາມຜິດບາບ ແລະ ມາຈາກພຣະເຈົ້າ

ໂດຍກົງ, ໂດຍບໍ່ໄດ້ຖືກຄອບງຳໂດຍຊາຕານ. ພຣະເຢຊູພຽງແຕ່ຢູ່ໃນຄວາມຄ້າຍຄືເນື້ອໜັງທີ່ເປັນບາບ ແລະ ບໍ່ແມ່ນຕົວແທນໃຫ້ກັບຄວາມບາບ; ເພາະສະນັ້ນ, ການປະຕິບັດ, ການກະທຳ ແລະ ພຣະທຳຂອງພຣະອົງ ຈົນເຖິງເວລາກ່ອນການສຳເລັດຂອງພາລະກິດຜ່ານການຖືກຄຶງທີ່ໄມ້ກາງແຂນ (ລວມເຖິງຊ່ວງເວລາທີ່ຖືກຄຶງໄວ້ທີ່ໄມ້ກາງແຂນຂອງພຣະອົງ), ທັງໝົດນີ້ລ້ວນແລ້ວແຕ່ເປັນຕົວແທນຂອງພຣະເຈົ້າໂດຍກົງ. ຕົວຢ່າງຂອງພຣະເຢຊູແມ່ນພຽງພໍທີ່ຈະພິສູດວ່າ ມະນຸດຄົນໃດກໍຕາມທີ່ມີຄວາມຜິດບາບໂດຍທຳມະຊາດບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ ແລະ ຄວາມຜິດບາບຂອງມະນຸດນັ້ນຄືຕົວແທນໃຫ້ກັບຊາຕານ. ເວົ້າໄດ້ວ່າ ຄວາມຜິດບາບບໍ່ແມ່ນຕົວແທນພຣະເຈົ້າ ແລະ ພຣະເຈົ້າປາສະຈາກຄວາມຜິດບາບ. ແມ່ນແຕ່ພາລະກິດທີ່ກະທຳໃນມະນຸດໂດຍພຣະວິນຍານບໍລິສຸດກໍພຽງແຕ່ສາມາດຖືໄດ້ວ່າເປັນການນຳພາໂດຍພຣະວິນຍານບໍລິສຸດ ແລະ ບໍ່ສາມາດເວົ້າໄດ້ວ່າ ມະນຸດໄດ້ກະທຳແທນພຣະເຈົ້າ. ແຕ່ເທົ່າທີ່ມະນຸດໄດ້ໄຕ່ຕອງແລ້ວ ບໍ່ວ່າຄວາມຜິດບາບຂອງເຂົາ ຫຼື ອຸປະນິໄສຂອງເຂົາແມ່ນບໍ່ສາມາດແທນພຣະເຈົ້າໄດ້. ຈາກການເບິ່ງພາລະກິດທີ່ພຣະວິນຍານບໍລິສຸດກະທຳໃນມະນຸດຈາກອະດີດຈົນເຖິງປັດຈຸບັນ, ຄົນເຮົາຈະເຫັນວ່າ ມະນຸດມີສິ່ງທີ່ເຂົາດຳລົງຊີວິດຕາມ; ທັງໝົດກໍຍ້ອນວ່າພຣະວິນຍານບໍລິສຸດໄດ້ເຮັດພາລະກິດໃນຕົວເຂົາ. ມີຄົນໜ້ອຍຫຼາຍທີ່ສາມາດດຳລົງຊີວິດຕາມຄວາມຈິງຫຼັງຈາກທີ່ຖືກຈັດການ ແລະ ຖືກລົງວິໄນໂດຍພຣະວິນຍານບໍລິສຸດ. ເວົ້າໄດ້ວ່າ ມີພຽງແຕ່ພາລະກິດຂອງພຣະວິນຍານບໍລິສຸດເທົ່ານັ້ນທີ່ມີຢູ່ ແລະ ການຮ່ວມມືໃນສ່ວນຂອງມະນຸດແມ່ນຂາດຫາຍໄປ. ເຈົ້າເຫັນສິ່ງນີ້ຢ່າງຊັດເຈນແລ້ວບໍ? ເມື່ອເປັນແບບນີ້, ເຈົ້າຄວນເຮັດແນວໃດເພື່ອຮ່ວມກັບພຣະອົງຢ່າງສຸດຄວາມສາມາດ ແລະ ເພື່ອບັນລຸໜ້າທີ່ຂອງເຈົ້າໃນຂະນະທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ?

# ການບໍລິການທາງສາສະໜາຕ້ອງຖືກລຶບລ້າງ

ນັບຕັ້ງແຕ່ເລີ່ມຕົ້ນພາລະກິດຂອງພຣະອົງຕະຫຼອດທົ່ວທັງຈັກກະວານ, ພຣະເຈົ້າໄດ້ກຳນົດຊາຕາຫຼາຍຄົນເພື່ອຮັບໃຊ້ພຣະອົງ ລວມທັງຜູ້ຄົນຈາກທຸກຊົນຊັ້ນທຸກສາຂາອາຊີບ. ຈຸດປະສົງຂອງພຣະອົງແມ່ນເພື່ອເພິ່ງພໍໃຈຄວາມປາຖະໜາຂອງພຣະອົງ ແລະ ເພື່ອເຮັດໃຫ້ພາລະກິດຂອງພຣະອົງໃນໂລກນີ້ສຳເລັດລົງຢ່າງລາບລື້ນ. ນີ້ແມ່ນຈຸດປະສົງຂອງພຣະເຈົ້າໃນການເລືອກເອົາຜູ້ທີ່ຈະມາຮັບໃຊ້ພຣະອົງ. ທຸກຄົນທີ່ຮັບໃຊ້ພຣະເຈົ້າຕ້ອງເຂົ້າໃຈຈຸດປະສົງຂອງພຣະເຈົ້າ. ພາລະກິດນີ້ຂອງພຣະອົງເຮັດໃຫ້ສະຕິປັນຍາ ແລະ ລິດອຳນາດຂອງພຣະເຈົ້າ ແລະ ຫຼັກການແຫ່ງພາລະກິດຂອງພຣະອົງຢູ່ໃນແຜ່ນດິນໂລກນີ້ປະຈັກຕາຕໍ່ຜູ້ຄົນຫຼາຍຂຶ້ນ. ພຣະເຈົ້າໄດ້ສະເດັດມາໃນໂລກແທ້ຈິງເພື່ອກະທຳພາລະກິດຂອງພຣະອົງ, ພົວພັນກັບຜູ້ຄົນ ແລະ ເພື່ອໃຫ້ພວກເຂົາໄດ້ຮູ້ເຖິງການກະທຳຂອງພຣະອົງຢ່າງຊັດເຈນຍິ່ງຂຶ້ນ. ມື້ນີ້, ພວກເຈົ້າ ນັ້ນກໍຄື ກຸ່ມຄົນເຫຼົ່ານີ້ແມ່ນໂຊກດີທີ່ໄດ້ຮັບໃຊ້ພຣະເຈົ້າແທ້ຈິງ. ນີ້ແມ່ນພອນທີ່ບໍ່ອາດຄຳນວນໄດ້ສຳລັບພວກເຈົ້າ. ແທ້ຈິງແລ້ວ, ພວກເຈົ້າແມ່ນຖືກຍົກລະດັບຂຶ້ນໂດຍພຣະເຈົ້າ. ໃນການເລືອກເອົາຄົນໃດໜຶ່ງມາຮັບໃຊ້ພຣະອົງ, ພຣະເຈົ້າມີຫຼັກການຂອງພຣະອົງເອງສະເໝີ. ການຮັບໃຊ້ພຣະເຈົ້າ ມັນບໍ່ແມ່ນເປັນເລື່ອງຂອງການກະຕືລືລົ້ນດັ່ງທີ່ຜູ້ຄົນຈິນຕະນາການ. ມື້ນີ້ພວກເຈົ້າເຫັນແລ້ວວ່າ ຜູ້ທີ່ຮັບໃຊ້ຢູ່ຕໍ່ໜ້າພຣະເຈົ້າ ແມ່ນເຮັດສິ່ງນັ້ນໂດຍການຊີ້ນຳຂອງພຣະເຈົ້າ ແລະ ພາລະກິດຂອງພຣະວິນຍານບໍລິສຸດ; ຍ້ອນວ່າພວກເຂົາແມ່ນຜູ້ທີ່ສະແຫວງຫາຄວາມຈິງ. ນີ້ແມ່ນເງື່ອນໄຂຂັ້ນຕໍ່າສຳລັບທຸກຄົນທີ່ຮັບໃຊ້ພຣະເຈົ້າ.

ການຮັບໃຊ້ພຣະເຈົ້າບໍ່ແມ່ນເລື່ອງງ່າຍ. ຜູ້ທີ່ບໍ່ຍອມຫັນປ່ຽນຈາກນິໄສທຸດຈະລິດ ບໍ່ສາມາດຮັບໃຊ້ພຣະເຈົ້າໄດ້. ຖ້າຫາກນິໄສຂອງເຈົ້າຍັງບໍ່ໄດ້ຖືກຕັດສິນ ແລະ ລົງໂທດໂດຍພຣະທຳຂອງພຣະເຈົ້າແລ້ວນິໄສຂອງເຈົ້າກໍຍັງເປັນຕົວແທນຂອງຊາຕານຢູ່ ເຊິ່ງພິສູດໃຫ້ເຫັນວ່າການທີ່ເຈົ້າຮັບໃຊ້ພຣະເຈົ້ານັ້ນແມ່ນອອກມາຈາກຄວາມຕັ້ງໃຈທີ່ດີຂອງຕົວເຈົ້າເອງ ນັ້ນກໍຄືການຮັບໃຊ້ຂອງເຈົ້າແມ່ນອີງຕາມທາດແທ້ແບບຊາຕານຂອງເຈົ້າ. ເຈົ້າຮັບໃຊ້ພຣະເຈົ້າດ້ວຍບຸກຄະລິກ ທຳມະຊາດຂອງເຈົ້າ ແລະ ດ້ວຍຄວາມມັກສ່ວນຕົວຂອງເຈົ້າ. ຍິ່ງໄປກວ່ານັ້ນ, ເຈົ້າຍັງຄິດສະເໝີວ່າສິ່ງທີ່ເຈົ້າເຕັມໃຈເຮັດຄືສິ່ງທີ່ພຣະເຈົ້າເພິ່ງພໍໃຈ ແລະ ສິ່ງທີ່ເຈົ້າບໍ່ປາຖະໜາເຮັດຄືສິ່ງທີ່ພຣະເຈົ້າກຽດຊັງ; ທັງໝົດທີ່ເຈົ້າເຮັດແມ່ນອີງຕາມຄວາມມັກຂອງເຈົ້າເອງ. ນີ້ຈະເອີ້ນວ່າເປັນການຮັບໃຊ້ພຣະເຈົ້າໄດ້ບໍ? ໃນທີ່ສຸດ, ມັນຈະບໍ່ມີການປ່ຽນແປງໃນຊີວິດຈິດໃຈຂອງເຈົ້າແມ່ນແຕ່ໜ້ອຍດຽວ, ກົງກັນຂ້າມ, ການຮັບໃຊ້ຂອງເຈົ້າຈະເຮັດໃຫ້ເຈົ້າດື້ດ້ານຍິ່ງຂຶ້ນກວ່າເກົ່າ, ນີ້ຈະຝັງເລິກເຂົ້າໃນນິໄສອັນເສື່ອມຊາມຂອງເຈົ້າ ແລະ ດ້ວຍເຫດນີ້, ເຈົ້າຈະສ້າງກົດເກນສ່ວນຕົວກ່ຽວກັບການຮັບໃຊ້ພຣະເຈົ້າໂດຍອີງໃສ່ບຸກຄະລິກຂອງເຈົ້າເອງເປັນຫຼັກ ແລະ ອີງຕາມປະສົບການທີ່ໄດ້ຮັບຈາກການຮັບໃຊ້ຕາມທັດສະນະຄະຕິຂອງເຈົ້າເອງ. ສິ່ງເຫຼົ່ານີ້ແມ່ນປະສົບການ ແລະ ບົດຮຽນຂອງມະນຸດ. ມັນແມ່ນປັດຊະຍາຂອງການດຳລົງຢູ່ໃນແຜ່ນດິນໂລກຂອງມະນຸດ. ຜູ້ຄົນແບບນີ້ສາມາດຈັດຢູ່ໃນກຸ່ມພວກຟາຣີຊາຍ ແລະ ສາວົກຂອງສາສະໜາ. ຖ້າຫາກ

ພວກເຂົາບໍ່ເຄີຍຕື່ນຕົວ ແລະ ກັບໃຈ, ໃນທີ່ສຸດ ພວກເຂົາກໍຈະຫັນໄປຫາພຣະຄຣິດທຽມ ແລະ ຜູ້ຕໍ່ຕ້ານພຣະຄຣິດຢ່າງແນ່ນອນ ແລະ ຜູ້ທີ່ຫຼອກລວງຄົນໃນຍຸກສຸດທ້າຍ. ພຣະຄຣິດທຽມ ແລະ ຜູ້ຕໍ່ຕ້ານພຣະຄຣິດທີ່ຖືກກ່າວເຖິງຈະປາກົດຂຶ້ນຈາກທ່າມກາງຜູ້ຄົນດັ່ງກ່າວ. ຖ້າຜູ້ທີ່ຮັບໃຊ້ພຣະເຈົ້າເຮັດຕາມນິໄສຂອງພວກເຂົາ ແລະ ກະທຳຕາມຄວາມປະສົງສ່ວນຕົວຂອງພວກເຂົາແລ້ວ, ພວກເຂົາແມ່ນຕົກຢູ່ໃນຄວາມສ່ຽງທີ່ຈະຖືກຂັບໄລ່ອອກທຸກເວລາ. ຜູ້ທີ່ໃຊ້ປະສົບການສະສົມມາຫຼາຍປີໃນການຮັບໃຊ້ພຣະເຈົ້າເພື່ອເອົາຊະນະໃຈຄົນອື່ນ, ສັ່ງສອນພວກເຂົາ ແລະ ຄວບຄຸມພວກເຂົາ; ຢືນຢູ່ທີ່ສູງສົ່ງ ແລະ ຜູ້ທີ່ບໍ່ເຄີຍກັບໃຈ, ບໍ່ເຄີຍສາລະພາບບາບຂອງພວກເຂົາ ແລະ ບໍ່ເຄີຍປ່ອຍວາງຜົນປະໂຫຍດຈາກຕຳແໜ່ງ ເຊິ່ງຜູ້ຄົນເຫຼົ່ານີ້ຈະລົ້ມລົງຕໍ່ໜ້າພຣະເຈົ້າ. ພວກເຂົາເປັນບຸກຄົນປະເພດດຽວກັບໂປໂລ ທີ່ອວດອ້າງຄວາມເປັນອາວຸໂສຂອງພວກເຂົາ ແລະ ໂອ້ອວດຄຸນວຸດທິຂອງພວກເຂົາ. ພຣະເຈົ້າຈະບໍ່ນຳເອົາຄົນປະເພດນີ້ໄປສູ່ຄວາມສົມບູນ. ການຮັບໃຊ້ດັ່ງກ່າວນີ້ລົບກວນພາລະກິດຂອງພຣະເຈົ້າ. ຜູ້ຄົນມັກຍຶດຕິດກັບສິ່ງເກົ່າສະເໝີ. ພວກເຂົາຍຶດຕິດກັບແນວຄວາມຄິດໃນອະດີດ, ຍຶດຕິດກັບທຸກສິ່ງຈາກອະດີດ. ນີ້ແມ່ນອຸປະສັກອັນໃຫຍ່ຫຼວງຕໍ່ການຮັບໃຊ້ຂອງພວກເຂົາ. ຖ້າເຈົ້າບໍ່ສາມາດປະຖິ້ມພວກມັນ, ສິ່ງເຫຼົ່ານີ້ຈະບີບຮັດເຈົ້າຕະຫຼອດຊີວິດ. ພຣະເຈົ້າຈະບໍ່ຍົກຍໍເຈົ້າແມ່ນແຕ່ໜ້ອຍດຽວ ບໍ່ວ່າເຈົ້າຈະຫັກຂາແລ່ນ ຫຼື ຫັກຫຼັງເຈົ້າໂດຍໃຊ້ແຮງງານໜັກກໍຕາມ, ບໍ່ວ່າເຈົ້າຈະຖືກຂ້າໃນການຮັບໃຊ້ພຣະເຈົ້າກໍຕາມ. ກົງກັນຂ້າມ, ພຣະອົງຈະບອກວ່າເຈົ້າເປັນຄົນຊົ່ວຊ້າ.

ເລີ່ມແຕ່ມື້ນີ້, ພຣະເຈົ້າຈະເຮັດໃຫ້ຜູ້ທີ່ບໍ່ມີຄວາມເຊື່ອທາງສາສະໜາ, ຜູ້ທີ່ເຕັມໃຈປ່ອຍວາງຄວາມເປັນຕົວຕົນເກົ່າຂອງພວກເຂົາ ແລະ ຜູ້ທີ່ເຊື່ອຟັງພຣະເຈົ້າດ້ວຍຈິດໃຈທີ່ ສັດຊື່ໃຫ້ເປັນຜູ້ທີ່ສົມບູນແບບຢ່າງເປັນທາງການ. ພຣະອົງຈະເຮັດໃຫ້ຜູ້ທີ່ປາຖະໜາພຣະທຳຂອງພຣະອົງເປັນຜູ້ທີ່ສົມບູນແບບ. ຜູ້ຄົນເຫຼົ່ານີ້ຄວນລຸກຂຶ້ນ ແລະ ຮັບໃຊ້ພຣະເຈົ້າ. ໃນພຣະເຈົ້າມີຄວາມອຸດົມສົມບູນທີ່ບໍ່ມີວັນສິ້ນສຸດ ແລະ ສະຕິປັນຍາທີ່ບໍ່ມີຂອບເຂດ. ພາລະກິດທີ່ໜ້າອັດສະຈັນໃຈ ແລະ ພຣະທຳທີ່ລ້ຳຄ່າຂອງພຣະອົງລໍຖ້າຜູ້ຄົນຈຳນວນຫຼວງຫຼາຍໃຫ້ໄດ້ຊື່ນຊົມ. ດັ່ງທີ່ເປັນຢູ່ໃນປັດຈຸບັນ, ຜູ້ທີ່ມີຄວາມເຊື່ອທາງສາສະໜາ, ຜູ້ທີ່ມີຖານະອາວຸໂສ ແລະ ຜູ້ທີ່ບໍ່ສາມາດປ່ອຍວາງໄດ້ ເຫັນວ່າເປັນການຍາກທີ່ຈະຍອມຮັບເອົາສິ່ງໃໝ່ໆເຫຼົ່ານີ້. ພຣະວິນຍານບໍລິສຸດບໍ່ມີໂອກາດທີ່ຈະເຮັດໃຫ້ຜູ້ຄົນເຫຼົ່ານີ້ສົມບູນແບບໄດ້. ຖ້າຫາກວ່າບຸກຄົນນັ້ນບໍ່ຕັ້ງໃຈເຊື່ອຟັງ ແລະ ບໍ່ສະແຫວງຫາພຣະທຳຂອງພຣະເຈົ້າແລ້ວ, ພວກເຂົາຈະບໍ່ມີທາງໄດ້ຮັບສິ່ງໃໝ່ໆເຫຼົ່ານີ້ໄດ້; ພວກເຂົາພຽງຈະກາຍເປັນຄົນຕໍ່ຕ້ານຫຼາຍຂຶ້ນ, ເລ່ຫຼ່ຽມຫຼາຍຂຶ້ນ ແລະ ສຸດທ້າຍກໍຈະຈົບລົງໃນເສັ້ນທາງທີ່ຜິດ. ໃນການກະທຳພາລະກິດຂອງພຣະອົງໃນປັດຈຸບັນນີ້ ພຣະເຈົ້າຈະຍົກລະດັບຜູ້ທີ່ຮັກພຣະອົງດ້ວຍໃຈຈິງ ແລະ ຜູ້ທີ່ສາມາດຍອມຮັບແສງສະຫວ່າງໃໝ່. ພຣະອົງຈະຕັດສາວົກສາສະໜາຜູ້ທີ່ອ້າງວ່າເປັນຜູ້ອາວຸໂສອອກທັງໝົດ. ພຣະອົງບໍ່ຕ້ອງການຜູ້ທີ່ດື້ດ້ານຕໍ່ຕ້ານການປ່ຽນແປງແມ່ນແຕ່ຄົນດຽວ. ເຈົ້າຢາກເປັນໜຶ່ງໃນບຸກຄົນເຫຼົ່ານີ້ບໍ? ເຈົ້າໃຫ້ການຮັບໃຊ້ໂດຍອີງໃສ່ຄວາມມັກສ່ວນຕົວຂອງເຈົ້າບໍ ຫຼື ເຈົ້າເຮັດໃນສິ່ງທີ່ພຣະເຈົ້າຮຽກຮ້ອງບໍ? ນີ້ແມ່ນສິ່ງທີ່ເຈົ້າຕ້ອງຮູ້ດ້ວຍຕົວຂອງເຈົ້າເອງ. ເຈົ້າເປັນສາວົກສາສະໜາບໍ ຫຼື ເຈົ້າແມ່ນເດັກເກີດໃໝ່ທີ່ຖືກເຮັດໃຫ້ບໍລິສຸດ

ດ້ວຍພຣະເຈົ້າ? ການຮັບໃຊ້ຂອງເຈົ້າໄດ້ຖືກຍົກຍ້ອງໂດຍພຣະວິນຍານບໍລິສຸດຫຼາຍປານໃດ? ໃນນັ້ນມີຫຼາຍປານໃດທີ່ພຣະເຈົ້າຈະບໍ່ສົນໃຈລໍາລຶກເຖິງມັນ? ຫຼັງຈາກຫຼາຍປີໃນການຮັບໃຊ້, ຊີວິດຂອງເຈົ້າໄດ້ປ່ຽນແປງຢ່າງໃຫຍ່ຫຼວງປານໃດ? ເຈົ້າຈະແຈ້ງກ່ຽວກັບສິ່ງທັງໝົດເຫຼົ່ານີ້ແລ້ວບໍ? ຖ້າເຈົ້າເຊື່ອຢ່າງແທ້ຈິງ, ເຈົ້າຈະປະຖິ້ມແນວຄວາມຄິດທາງດ້ານສາສະໜາແບບເກົ່າຂອງເຈົ້າໃນເມື່ອກ່ອນ ແລະ ຈະຮັບໃຊ້ພຣະເຈົ້າໃນເສັ້ນທາງໃໝ່ດີຂຶ້ນ. ມັນຍັງບໍ່ຊ້າເກີນໄປທີ່ຈະລຸກຂຶ້ນຕອນນີ້. ຄວາມຄິດທາງສາສະໜາແບບເກົ່າສາມາດເຮັດໃຫ້ຊີວິດທັງຊີວິດຂອງຜູ້ຄົນສູນເສຍ. ປະສົບການທີ່ຜູ້ຄົນໄດ້ຮັບສາມາດເຮັດໃຫ້ພວກເຂົາອອກຫ່າງຈາກພຣະເຈົ້າ ແລະ ເຮັດສິ່ງຕ່າງໆຕາມວິທີທາງຂອງພວກເຂົາເອງ. ຖ້າເຈົ້າບໍ່ປ່ອຍວາງສິ່ງດັ່ງກ່າວ, ມັນກໍຈະກາຍເປັນສິ່ງກີດຂວາງການຈະເລີນເຕີບໂຕໃນຊີວິດຂອງເຈົ້າ. ພຣະເຈົ້າເຮັດໃຫ້ຄົນທີ່ຮັບໃຊ້ພຣະອົງສົມບູນແບບຢູ່ສະເໝີ ແລະ ບໍ່ໄດ້ຂັບໄລ່ພວກເຂົາອອກຢ່າງງ່າຍດາຍ. ຖ້າເຈົ້າຍອມຮັບການຕັດສິນ ແລະ ການລົງໂທດຂອງພຣະທໍາຂອງພຣະເຈົ້າຢ່າງຈິງໃຈ. ຖ້າເຈົ້າຍອມປະຖິ້ມແນວທາງປະຕິບັດ ແລະ ກົດທາງສາສະໜາເກົ່າຂອງເຈົ້າ ແລະ ຢຸດຕິໃຊ້ຄວາມເຊື່ອທາງສາສະໜາແບບເກົ່າເປັນເຄື່ອງວັດແທກພຣະທໍາຂອງພຣະເຈົ້າໃນວັນນີ້, ພຽງເມື່ອນັ້ນເຈົ້າກໍຈະມີອະນາຄົດໃໝ່. ແຕ່ຖ້າເຈົ້າຍຶດຕິດກັບສິ່ງເກົ່າ, ຖ້າເຈົ້າຍັງຄົງໃຫ້ຄຸນຄ່າສິ່ງເຫຼົ່ານີ້ແລ້ວ ກໍບໍ່ມີທາງທີ່ເຈົ້າຈະສາດມາດຖືກຊ່ວຍໃຫ້ລອດໄດ້. ພຣະເຈົ້າບໍ່ສົນໃຈຄົນເຊັ່ນນັ້ນ. ຖ້າເຈົ້າປາຖະໜາທີ່ຈະຖືກເຮັດໃຫ້ສົມບູນແບບ ເຈົ້າຕ້ອງຕັ້ງໃຈຍອມປ່ອຍຖິ້ມທຸກສິ່ງຈາກເມືອກ່ອນທັງໝົດ. ເຖິງແມ່ນວ່າສິ່ງທີ່ໄດ້ເຮັດໃນເມື່ອກ່ອນ ນັ້ນເປັນສິ່ງທີ່ຖືກຕ້ອງ, ເຖິງແມ່ນວ່າມັນເປັນພາລະກິດຂອງພຣະເຈົ້າ, ເຈົ້າຕ້ອງສາມາດປະຖິ້ມມັນໄດ້ ແລະ ຢຸດຍຶດຕິດກັບມັນ. ເຖິງແມ່ນວ່າມັນເປັນພາລະກິດຂອງພຣະວິນຍານບໍລິສຸດທີ່ເຫັນໄດ້ຢ່າງຊັດເຈນ ແລະ ສໍາເລັດໂດຍກົງໂດຍພຣະວິນຍານບໍລິສຸດກໍຕາມ ມື້ນີ້ເຈົ້າຕ້ອງປະຖິ້ມມັນ. ເຈົ້າຕ້ອງບໍ່ຍຶດຕິດກັບມັນ. ນີ້ແມ່ນສິ່ງທີ່ພຣະເຈົ້າຕ້ອງການ. ທຸກສິ່ງຢ່າງຕ້ອງຖືກຟື້ນຟູຄືນໃໝ່. ໃນພາລະກິດ ແລະ ໃນພຣະທໍາຂອງພຣະເຈົ້າ, ພຣະອົງບໍ່ໄດ້ອ້າງອີງເຖິງສິ່ງເກົ່າທີ່ຜ່ານມາ ແລະ ບໍ່ໄດ້ຂຸດຄົ້ນຫາປະຕິທິນອັນເກົ່າແກ່. ພຣະເຈົ້າແມ່ນພຣະເຈົ້າທີ່ໃໝ່ສະເໝີ ແລະ ບໍ່ເຄີຍເກົ່າ ແລະ ບໍ່ໄດ້ຍຶດຕິດແມ່ນແຕ່ກັບພຣະທໍາຂອງພຣະອົງເອງຈາກອະດີດ ເຊິ່ງສະແດງໃຫ້ເຫັນວ່າພຣະເຈົ້າບໍ່ໄດ້ປະຕິບັດຕາມກົດເກນໃດໆ. ດັ່ງນັ້ນ ຖ້າເຈົ້າ ໃນນາມເປັນມະນຸດຍຶດຕິດຢູ່ກັບອະດີດຕະຫຼອດ, ຖ້າເຈົ້າປະຕິເສດທີ່ຈະປ່ອຍວາງ ແລະ ນໍາໃຊ້ມັນເຂົ້າໃນການປະຕິບັດໃນຮູບແບບທໍານຽມຢ່າງເຂັ້ມງວດ, ໃນຂະນະທີ່ພຣະເຈົ້າບໍ່ໄດ້ປະຕິບັດພາລະກິດໃນທາງທີ່ພຣະອົງເຄີຍເຮັດມາກ່ອນ, ແລ້ວຄໍາເວົ້າ ແລະ ການກະທໍາຂອງເຈົ້າບໍ່ແມ່ນເປັນການຕໍ່ຕ້ານບໍ? ເຈົ້າບໍ່ໄດ້ກາຍເປັນສັດຕູຂອງພຣະເຈົ້າແລ້ວບໍ? ເຈົ້າເຕັມໃຈປ່ອຍໃຫ້ໝົດທັງຊີວິດຂອງເຈົ້າຕົກຢູ່ໃນຄວາມຫາຍະນະ ແລະ ພິນາດໄປກັບສິ່ງເກົ່າເຫຼົ່ານີ້ບໍ? ສິ່ງເກົ່າເຫຼົ່ານີ້ຈະເຮັດໃຫ້ເຈົ້າກາຍເປັນບຸກຄົນທີ່ຂັດຂວາງພາລະກິດຂອງພຣະເຈົ້າ. ເຈົ້າຢາກເປັນຄົນປະເພດນັ້ນບໍ? ຖ້າເຈົ້າບໍ່ຕ້ອງການເປັນແບບນັ້ນແທ້, ຈົ່ງຢຸດຕິໃນສິ່ງທີ່ເຈົ້າກໍາລັງເຮັດຢູ່ໂດຍໄວ ແລະ ຫັນກັບມາເລີ່ມຕົ້ນທຸກສິ່ງທຸກຢ່າງໃໝ່. ພຣະເຈົ້າຈະບໍ່ຈົດຈໍາການຮັບໃຊ້ໃນອະດີດຂອງເຈົ້າ.

# ໃນຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າ ເຈົ້າຄວນເຊື່ອຟັງພຣະເຈົ້າ

ເປັນຫຍັງເຈົ້າຈຶ່ງເຊື່ອໃນພຣະເຈົ້າ? ຄົນສ່ວນໃຫຍ່ຈະສັບສົນກັບຄຳຖາມນີ້. ພວກເຂົາຈະມີມຸມມອງ ທີ່ແຕກຕ່າງກັນຢ່າງສິ້ນເຊີງກ່ຽວກັບພຣະເຈົ້າທີ່ແທ້ຈິງ ແລະ ພຣະເຈົ້າທີ່ຢູ່ເທິງສະຫວັນຢູ່ສະເໝີ ເຊິ່ງສະແດງໃຫ້ເຫັນວ່າ ພວກເຂົາເຊື່ອໃນພຣະເຈົ້າ ບໍ່ແມ່ນຍ້ອນເພື່ອເຊື່ອຟັງພຣະອົງ ແຕ່ເພື່ອຮັບຜົນປະໂຫຍດບາງຢ່າງ ຫຼື ເພື່ອຫຼີກໜີຄວາມທຸກທໍລະມານທີ່ໄພພິບັດໄດ້ນຳມາ. ມີແຕ່ເມື່ອນັ້ນພວກເຂົາຈຶ່ງຈະຂ້ອນຂ້າງເຊື່ອຟັງ. ການເຊື່ອຟັງຂອງພວກເຂົາແມ່ນມີເງື່ອນໄຂ ນັ້ນກໍຄືເພື່ອຜົນປະໂຫຍດຕໍ່ຄວາມຫວັງສ່ວນຕົວຂອງພວກເຂົາ ແລະ ພວກເຂົາຖືກບີບບັງຄັບ. ສະນັ້ນ ເປັນຫຍັງເຈົ້າຈຶ່ງເຊື່ອໃນພຣະເຈົ້າ? ຖ້າພຽງເພື່ອຜົນປະໂຫຍດຕໍ່ຄວາມຫວັງ ແລະ ເພື່ອຊາຕາກຳຂອງເຈົ້າເທົ່ານັ້ນແລ້ວມັນຈະດີກວ່າຖ້າເຈົ້າບໍ່ໄດ້ເຊື່ອເລີຍ. ຄວາມເຊື່ອແບບນີ້ແມ່ນການຫຼອກລວງຕົວເອງ, ການເຮັດໃຫ້ໝັ້ນໃຈໃນຕົວເອງ ແລະ ການຍົກຍ້ອງຕົວເອງ. ຖ້າຄວາມເຊື່ອຂອງເຈົ້າບໍ່ໄດ້ຖືກສ້າງຂຶ້ນບົນພື້ນຖານຂອງການເຊື່ອຟັງພຣະເຈົ້າ ສຸດທ້າຍເຈົ້າກໍຈະຖືກລົງໂທດ ຍ້ອນການຕໍ່ຕ້ານພຣະເຈົ້າ. ທຸກຄົນທີ່ບໍ່ສະແຫວງຫາຄວາມເຊື່ອຟັງຕໍ່ພຣະເຈົ້າໃນຄວາມເຊື່ອຂອງພວກເຂົາກໍຕໍ່ຕ້ານພຣະເຈົ້າ. ພຣະເຈົ້າຮຽກຮ້ອງໃຫ້ຜູ້ຄົນສະແຫວງຫາຄວາມຈິງ, ໃຫ້ພວກເຂົາຫິວກະຫາຍຫາພຣະທຳຂອງພຣະອົງ ແລະ ໃຫ້ກິນ ແລະ ດື່ມພຣະທຳຂອງພຣະອົງ ແລະ ນຳເອົາພຣະທຳເຫຼົ່ານັ້ນມາປະຕິບັດ ເພື່ອວ່າພວກເຂົາຈະສາມາດບັນລຸການເຊື່ອຟັງຕໍ່ພຣະເຈົ້າ. ຖ້າສິ່ງເຫຼົ່ານີ້ຄືເຈດຕະນາທີ່ແທ້ຈິງຂອງເຈົ້າ, ແລ້ວພຣະເຈົ້າກໍຈະຍົກເຈົ້າຂຶ້ນຢ່າງແນ່ນອນ ແລະ ມີຄວາມເມດຕາຕໍ່ເຈົ້າຢ່າງແນ່ນອນ. ສິ່ງນີ້ແມ່ນບໍ່ຕ້ອງສົງໄສ ແລະ ບໍ່ສາມາດປ່ຽນແປງໄດ້. ຖ້າເຈດຕະນາຂອງເຈົ້າບໍ່ແມ່ນເພື່ອເຊື່ອຟັງພຣະເຈົ້າ ແລະ ເຈົ້າມີເປົ້າໝາຍອື່ນແລ້ວທຸກສິ່ງທີ່ເຈົ້າເວົ້າ ແລະ ເຮັດ ແລະ ຄຳອະທິຖານຕໍ່ໜ້າພຣະເຈົ້າ ແລະ ແມ່ນແຕ່ທຸກການກະທຳຂອງເຈົ້າກໍຈະເປັນສິ່ງທີ່ຕໍ່ຕ້ານພຣະອົງ. ເຈົ້າອາດຈະເປັນຄົນທີ່ເວົ້າອ່ອນໂຍນ ແລະ ມີມາລະຍາດອ່ອນນ້ອມ, ທຸກການກະທຳ ແລະ ທຸກຖ້ອຍຄຳຂອງເຈົ້າອາດຈະເບິ່ງຄືຖືກຕ້ອງ ແລະ ເຈົ້າອາດຈະເບິ່ງຄືຄົນທີ່ເຊື່ອຟັງ ແຕ່ເມື່ອເວົ້າເຖິງເຈດຕະນາຂອງເຈົ້າ ແລະ ຄວາມມຸມມອງຂອງເຈົ້າກ່ຽວກັບຄວາມເຊື່ອຕໍ່ພຣະເຈົ້າແລ້ວ ທຸກສິ່ງທີ່ເຈົ້າເຮັດແມ່ນເປັນການຕໍ່ຕ້ານພຣະເຈົ້າ; ທຸກສິ່ງທີ່ເຈົ້າເຮັດແມ່ນເປັນສິ່ງທີ່ຊົ່ວຮ້າຍ. ຜູ້ຄົນທີ່ເບິ່ງຄືຄົນເຊື່ອຟັງ ປຽບເໝືອນດັ່ງໂຕແກະ ແຕ່ພັດມີຫົວໃຈທີ່ມີເຈດຕະນາອັນຊົ່ວຮ້າຍ ຜູ້ຄົນເຫຼົ່ານັ້ນກໍເປັນຄືກັບໝາປ່າທີ່ແຕ່ງກາຍເປັນໂຕແກະ. ພວກເຂົາລ່ວງເກີນພຣະເຈົ້າໂດຍກົງ ແລະ ພຣະເຈົ້າຈະບໍ່ລະເວັ້ນພວກເຂົາແມ່ນແຕ່ຄົນດຽວ. ພຣະວິນຍານບໍລິສຸດຈະເປີດເຜີຍພວກເຂົາແຕ່ລະຄົນ ແລະ ສະແດງໃຫ້ທຸກຄົນສາມາດເຫັນວ່າ ພຣະວິນຍານບໍລິສຸດຈະກຽດຊັງ ແລະ ປະຕິເສດຜູ້ຄົນເຫຼົ່ານັ້ນທີ່ໜ້າຊື່ໃຈຄົດຢ່າງແນ່ນອນ. ບໍ່ຕ້ອງກັງວົນ: ພຣະເຈົ້າຈະຈັດການ ແລະ ແກ້ໄຂພວກເຂົາແຕ່ລະຄົນຕາມລຳດັບ.

ຖ້າເຈົ້າບໍ່ສາມາດຍອມຮັບແສງສະຫວ່າງໃໝ່ຂອງພຣະເຈົ້າ ແລະ ບໍ່ສາມາດເຂົ້າໃຈທຸກສິ່ງທີ່

ພຣະເຈົ້າກະທຳໃນປັດຈຸບັນ ແລະ ເຈົ້າບໍ່ສະແຫວງຫາແສງສະຫວ່າງນັ້ນ ຫຼື ບໍ່ດັ່ງນັ້ນ ເຈົ້າກໍສົງໄສມັນ, ຕັດສິນມັນ ຫຼື ກວດສອບ ແລະ ວິເຄາະມັນ, ແລ້ວເຈົ້າບໍ່ໄດ້ສົນໃຈທີ່ຈະເຊື່ອຟັງພຣະເຈົ້າ. ເມື່ອແສງສະຫວ່າງຂອງທີ່ນີ້ ແລະ ໃນປັດຈຸບັນນີ້ປາກົດຕົວຂຶ້ນ ຖ້າເຈົ້າຍັງເຊີດຊູແສງສະຫວ່າງຂອງມື້ວານ ແລະ ຕໍ່ຕ້ານພາລະກິດໃໝ່ຂອງພຣະເຈົ້າ, ແລ້ວເຈົ້າກໍບໍ່ແມ່ນຫຍັງນອກຈາກແມ່ນຄົນທີ່ໄຮ້ເຫດຜົນ ເຈົ້າກໍເປັນໜຶ່ງໃນຄົນທີ່ມີເຈດຕະນາຕໍ່ຕ້ານພຣະເຈົ້າ. ກະແຈສູ່ການເຊື່ອຟັງພຣະເຈົ້າແມ່ນການຊື່ນຊົມແສງສະຫວ່າງໃໝ່ ການທີ່ສາມາດຍອມຮັບເອົາແສງສະຫວ່າງນັ້ນ ແລະ ການນຳເອົາແສງສະຫວ່າງນັ້ນມາປະຕິບັດຕາມ. ມີແຕ່ສິ່ງນີ້ເທົ່ານັ້ນແມ່ນຄວາມເຊື່ອຟັງທີ່ແທ້ຈິງ. ຜູ້ຄົນທີ່ບໍ່ມີຄວາມປາດຖະໜາຈະສະແຫວງຫາພຣະເຈົ້າແມ່ນບໍ່ສາມາດຍອມຕໍ່ພຣະເຈົ້າໂດຍເຈດຕະນາ ແລະ ສາມາດຕໍ່ຕ້ານພຣະເຈົ້າເທົ່ານັ້ນ ເຊິ່ງເປັນມາຈາກຄວາມບໍ່ພໍໃຈຂອງພວກເຂົາກັບສິ່ງທີ່ເປັນຢູ່. ການທີ່ມະນຸດບໍ່ສາມາດເຊື່ອຟັງພຣະເຈົ້າກໍຍ້ອນວ່າເຂົາຖືກຄອບງຳໂດຍສິ່ງທີ່ມາກ່ອນໜ້າ. ສິ່ງທີ່ມາກ່ອນໜ້າໄດ້ເຮັດໃຫ້ຜູ້ຄົນມີແນວຄິດ ແລະ ຈິນຕະນາການທຸກຮູບແບບກ່ຽວກັບພຣະເຈົ້າ ແລະ ສິ່ງເຫຼົ່ານີ້ໄດ້ກາຍເປັນລັກສະນະຂອງພຣະເຈົ້າໃນຄວາມຄິດຂອງພວກເຂົາ. ສະນັ້ນ ສິ່ງທີ່ພວກເຂົາເຊື່ອແມ່ນແນວຄວາມຄິດຂອງພວກເຂົາເອງ ແລະ ມາດຕະຖານໃນຈິນຕະນາການຂອງພວກເຂົາເອງ. ຖ້າເຈົ້າສົມທຽບພຣະເຈົ້າທີ່ເຮັດພາລະກິດຕົວຈິງໃນປັດຈຸບັນ ກັບພຣະເຈົ້າຈາກຈິນຕະນາການຂອງເຈົ້າເອງ ແລ້ວຄວາມເຊື່ອຂອງເຈົ້າແມ່ນມາຈາກຊາຕານ ແລະ ເປິເປື້ອນໄປດ້ວຍຄວາມມັກຂອງເຈົ້າເອງ, ພຣະເຈົ້າບໍ່ໄດ້ຕ້ອງການຄວາມເຊື່ອແບບນີ້. ບໍ່ວ່າຄຸນສົມບັດຂອງພວກເຂົາຈະສູງສົ່ງສໍ່າໃດ, ບໍ່ວ່າພວກເຂົາຈະມີການອຸທິດຕົນ, ເຖິງແມ່ນວ່າພວກເຂົາໄດ້ອຸທິດຄວາມພະຍາຍາມຕະຫຼອດຊີວິດຕໍ່ພາລະກິດຂອງພຣະອົງ ແລະ ໄດ້ຍອມເສຍສະຫຼະເພື່ອຄວາມເຊື່ອຂອງພວກເຂົາ, ພຣະເຈົ້າກໍຈະບໍ່ຍອມຮັບເອົາຄົນທີ່ມີຄວາມເຊື່ອແບບນີ້. ພຣະອົງມີແຕ່ມອບຄວາມກະລຸນາພຽງເລັກນ້ອຍໃຫ້ແກ່ພວກເຂົາ ແລະ ອະນຸຍາດໃຫ້ພວກເຂົາມີຄວາມສຸກກັບສິ່ງນັ້ນພຽງຊົ່ວຄາວ. ຜູ້ຄົນແບບນີ້ບໍ່ສາມາດເອົາຄວາມຈິງມາປະຕິບັດໄດ້. ພຣະວິນຍານບໍລິສຸດຈະບໍ່ດຳເນີນພາລະກິດພາຍໃນຕົວພວກເຂົາ ແລະ ພຣະເຈົ້າກໍຈະກຳຈັດພວກເຂົາແຕ່ລະຄົນຕາມລຳດັບ. ບໍ່ວ່າພວກເຂົາຈະເຖົ້າ ຫຼື ໜຸ່ມ ຜູ້ຄົນເຫຼົ່ານັ້ນທີ່ບໍ່ເຊື່ອຟັງພຣະເຈົ້າໃນຄວາມເຊື່ອຂອງພວກເຂົາ ແລະ ມີເຈດຕະນາທີ່ຜິດ ແມ່ນຜູ້ຄົນທີ່ຕໍ່ຕ້ານ ແລະ ຂັດຂວາງ ແລະ ຜູ້ຄົນດັ່ງກ່າວຈະຖືກກຳຈັດໂດຍພຣະເຈົ້າໂດຍບໍ່ຕ້ອງສົງໄສ. ຜູ້ທີ່ບໍ່ມີຄວາມເຊື່ອຟັງພຣະເຈົ້າແມ່ນແຕ່ໜ້ອຍດຽວ, ຜູ້ທີ່ຮັບຮູ້ພຽງແຕ່ຊື່ຂອງພຣະອົງ ແລະ ຜູ້ທີ່ມີຄວາມຮູ້ສຶກບາງຢ່າງກ່ຽວກັບຄວາມກະລຸນາ ແລະ ຄວາມເປັນຕາຮັກຂອງພຣະເຈົ້າ ແຕ່ບໍ່ເດີນຕາມບາດກ້າວຂອງພຣະວິນຍານບໍລິສຸດ ແລະ ບໍ່ເຊື່ອຟັງພາລະກິດປັດຈຸບັນ ແລະ ພຣະທຳຂອງພຣະວິນຍານບໍລິສຸດ, ຜູ້ຄົນດັ່ງກ່າວແມ່ນດຳລົງຊີວິດຢູ່ທ່າມກາງຄວາມເມດຕາຂອງພຣະເຈົ້າ ແລະ ພວກເຂົາຈະບໍ່ໄດ້ຖືກຮັບ ຫຼື ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນແບບຜ່ານການເຊື່ອຟັງຂອງພວກເຂົາ, ຜ່ານການກິນຂອງພວກເຂົາ, ການດື່ມ ແລະ ຜ່ານການຊື່ນຊົມກັບພຣະທຳຂອງພຣະເຈົ້າ ແລະ ຜ່ານຄວາມທຸກທໍລະມານ ແລະ ການຫຼໍ່ຫຼອມໃນຊີວິດຂອງພວກເຂົາ. ຜ່ານຄວາມເຊື່ອແບບນີ້ເທົ່ານັ້ນ ອຸປະນິໄສຂອງຜູ້ຄົນຈຶ່ງຈະສາມາດປ່ຽນແປງໄດ້ ແລະ ມີ

ແຕ່ເມື່ອນັ້ນ ພວກເຂົາຈະສາມາດມີເອົາຄວາມຮູ້ທີ່ແທ້ຈິງຂອງພຣະເຈົ້າໄດ້. ການບໍ່ພໍໃຈກັບການມີຊີວິດທ່າມກາງຄວາມກະລຸນາຂອງພຣະເຈົ້າ, ການປາຖະໜາຢ່າງຫ້າວຫັນ ແລະ ການຄົ້ນຫາຄວາມຈິງ ແລະ ການສະແຫວງຫາເພື່ອຖືກຮັບເອົາໂດຍພຣະເຈົ້າ, ນີ້ຄືຄວາມໝາຍໃນການເຊື່ອຟັງພຣະເຈົ້າຢ່າງມີສະຕິ ແລະ ນີ້ແມ່ນປະເພດຂອງຄວາມເຊື່ອທີ່ພຣະອົງຕ້ອງການແທ້ໆ. ຜູ້ຄົນທີ່ບໍ່ເຮັດຫຍັງນອກຈາກຊື່ນຊົມກັບຄວາມກະລຸນາຂອງພຣະເຈົ້າແມ່ນບໍ່ສາມາດຖືກເຮັດໃຫ້ສົມບູນແບບ ຫຼື ຖືກປ່ຽນແປງໄດ້; ແລະ ຄວາມເຊື່ອຟັງ, ຄວາມກະຕັນຍູ, ຄວາມຮັກ ແລະ ຄວາມອົດທົນຂອງພວກເຂົາແມ່ນລ້ວນແລ້ວແຕ່ຢູ່ໃນຜິວເຜີນເທົ່ານັ້ນ. ຜູ້ທີ່ພຽງແຕ່ຊື່ນຊົມກັບຄວາມເມດຕາຂອງພຣະເຈົ້າບໍ່ສາມາດຮູ້ຈັກພຣະເຈົ້າຢ່າງແທ້ຈິງ ແລະ ແມ່ນແຕ່ເມື່ອພວກເຂົາຮູ້ຈັກພຣະເຈົ້າ, ຄວາມຮູ້ຂອງພວກເຂົາກໍຈະມີພຽງຜິວເຜີນ ແລະ ພວກເຂົາຈະເວົ້າປະມານວ່າ "ພຣະເຈົ້າຮັກມະນຸດ" ຫຼື "ພຣະເຈົ້າເຫັນອົກເຫັນໃຈມະນຸດ". ສິ່ງນີ້ບໍ່ໄດ້ເປັນຕົວແທນໃຫ້ແກ່ຊີວິດຂອງມະນຸດ ແລະ ບໍ່ໄດ້ສະແດງໃຫ້ເຫັນວ່າ ຜູ້ຄົນຮູ້ຈັກພຣະເຈົ້າຢ່າງແທ້ຈິງ. ເມື່ອພຣະທຳຂອງພຣະເຈົ້າຫຼໍ່ຫຼອມພວກເຂົາ ຫຼື ເມື່ອການທົດລອງຂອງພຣະອົງມາເຖິງພວກເຂົາ, ຖ້າຜູ້ຄົນຍັງບໍ່ສາມາດເຊື່ອຟັງພຣະເຈົ້າ, ກົງກັນຂ້າມ ຖ້າພວກເຂົາຍັງສົງໄສ ແລະ ຍັງລົ້ມຢູ່, ແລ້ວ ພວກເຂົາບໍ່ໄດ້ເຊື່ອຟັງແມ່ນແຕ່ໜ້ອຍດຽວ. ພາຍໃນພວກເຂົາແມ່ນມີກົດລະບຽບ ແລະ ຂໍ້ຈຳກັດຫຼາຍຢ່າງກ່ຽວກັບຄວາມເຊື່ອໃນພຣະເຈົ້າ, ປະສົບການເກົ່າໆທີ່ເປັນຜົນມາຈາກຄວາມເຊື່ອເປັນເວລາຫຼາຍປີ ຫຼື ກົດລະບຽບທີ່ຫຼາກຫຼາຍແມ່ນອີງໃສ່ພຣະຄຳພີ. ຜູ້ຄົນແບບນີ້ຈະສາມາດເຊື່ອຟັງພຣະເຈົ້າໄດ້ບໍ? ຜູ້ຄົນເຫຼົ່ານີ້ແມ່ນເຕັມໄປດ້ວຍສິ່ງທີ່ເປັນມະນຸດ, ພວກເຂົາຈະສາມາດເຊື່ອຟັງພຣະເຈົ້າໄດ້ແນວໃດ? "ຄວາມເຊື່ອຟັງ" ຂອງພວກເຂົາແມ່ນອີງຕາມຄວາມມັກສ່ວນຕົວ, ພຣະເຈົ້າຕ້ອງການຄວາມເຊື່ອຟັງແບບນີ້ບໍ? ນີ້ບໍ່ແມ່ນການເຊື່ອຟັງພຣະເຈົ້າ ແຕ່ເປັນການຍຶດຕິດກົດລະບຽບ; ມັນເປັນການເຮັດໃຫ້ຕົນເອງພໍໃຈ ແລະ ການເອົາໃຈຕົນເອງ. ຖ້າເຈົ້າເວົ້າວ່າ ນີ້ແມ່ນການເຊື່ອຟັງພຣະເຈົ້າ, ມັນບໍ່ແມ່ນການດູໝິ່ນພຣະອົງບໍ? ເຈົ້າແມ່ນຟາໂຣຂອງຊາວອີຢິບ. ເຈົ້າໄດ້ເຮັດໃນສິ່ງທີ່ຊົ່ວຮ້າຍ ແລະ ເຈົ້າໄດ້ຮ່ວມໃນພາລະກິດເພື່ອຕໍ່ຕ້ານພຣະເຈົ້າຢ່າງຊັດເຈນ, ພຣະເຈົ້າຕ້ອງການໃຫ້ເຈົ້າຮັບໃຊ້ແບບນີ້ບໍ? ທາງທີ່ດີທີ່ສຸດ ເຈົ້າຄວນຟ້າວກັບໃຈ ແລະ ພະຍາຍາມມີຄວາມຮູ້ຈັກບາງຢ່າງກ່ຽວກັບຕົນເອງ. ຖ້າເຮັດບໍ່ໄດ້ ເຈົ້າກໍ່ຄວນຍ່າງຈາກໄປຈາກເຮືອນ; ສິ່ງນັ້ນຈະເປັນຜົນດີຕໍ່ເຈົ້າຫຼາຍກວ່າການທີ່ເຈົ້າຈະມາອ້າງຕົວຮັບໃຊ້ພຣະເຈົ້າ. ເຈົ້າຈະບໍ່ໄດ້ຂັດຂວາງ ແລະ ລົບກວນ; ເຈົ້າຈະຮູ້ຈັກສະຖານະຂອງເຈົ້າ ແລະ ມີຊີວິດຢ່າງສຸກສະບາຍ, ນັ້ນຈະບໍ່ດີກວ່າບໍ? ແລ້ວເຈົ້າກໍຈະບໍ່ຖືກລົງໂທດທີ່ຕໍ່ຕ້ານພຣະເຈົ້າ!

# ມັນສຳຄັນຫຼາຍທີ່ຈະ
# ສ້າງຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ

ເມື່ອຜູ້ຄົນເຊື່ອພຣະເຈົ້າ, ຮັກພຣະເຈົ້າ ແລະ ເຮັດໃຫ້ພຣະເຈົ້າເພິ່ງພໍໃຈ, ພວກເຂົາກໍສຳຜັດພຣະວິນຍານຂອງພຣະເຈົ້າດ້ວຍຫົວໃຈຂອງພວກເຂົາ ແລະ ດ້ວຍວິທີດັ່ງກ່າວຈຶ່ງໄດ້ຮັບຄວາມເພິ່ງພໍໃຈຂອງພຣະອົງ, ພວກເຂົາໃຊ້ຫົວໃຈຂອງພວກເຂົາເພື່ອພົວພັນກັບພຣະທຳຂອງພຣະເຈົ້າ ແລ້ວໄດ້ຮັບການດົນໃຈໂດຍພຣະວິນຍານຂອງພຣະອົງ. ຖ້າເຈົ້າປາຖະໜາທີ່ຈະໃຊ້ຊີວິດຝ່າຍວິນຍານທີ່ປົກກະຕິ ແລະ ສ້າງຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ, ແລ້ວກ່ອນອື່ນໝົດເຈົ້າຕ້ອງມອບໃຈໃຫ້ກັບພຣະອົງກ່ອນ. ມີພຽງແຕ່ຫຼັງຈາກທີ່ເຈົ້າໄດ້ສະຫງົບໃຈຂອງເຈົ້າຢູ່ຕໍ່ໜ້າພຣະອົງ ແລະ ຖອກເທຫົວໃຈທັງໝົດຂອງເຈົ້າໃຫ້ກັບພຣະອົງ ເຈົ້າຈຶ່ງຈະສາມາດພັດທະນາຊີວິດຝ່າຍວິນຍານທີ່ປົກກະຕິເທື່ອລະໜ້ອຍ. ຖ້າໃນຄວາມເຊື່ອຂອງຜູ້ຄົນໃນພຣະເຈົ້າ, ພວກເຂົາບໍ່ໄດ້ມອບຫົວໃຈຂອງພວກເຂົາໃຫ້ກັບພຣະອົງ, ຖ້າຫົວໃຈຂອງພວກເຂົາບໍ່ໄດ້ຢູ່ໃນພຣະອົງ ແລະ ພວກເຂົາບໍ່ປະຕິບັດຕໍ່ພາລະຂອງພຣະອົງເປັນດັ່ງພາລະຂອງພວກເຂົາເອງ, ແລ້ວທຸກສິ່ງທີ່ພວກເຂົາກະທຳກໍເປັນການຫຼອກລວງພຣະເຈົ້າ, ເປັນການກະທຳທີ່ປົກກະຕິຂອງຄົນທີ່ເຊື່ອຖືສາສະໜາ ແລະ ມັນຈະບໍ່ໄດ້ຮັບການຍົກຍ້ອງຈາກພຣະເຈົ້າໄດ້. ພຣະເຈົ້າບໍ່ສາມາດໄດ້ຮັບສິ່ງໃດຈາກຄົນປະເພດນີ້, ພວກເຂົາສາມາດເຮັດໜ້າທີ່ເປັນສິ່ງປະກອບສຳລັບພາລະກິດຂອງພຣະເຈົ້າເທົ່ານັ້ນ. ຄົນເຫຼົ່ານີ້ປຽບເໝືອນເຄື່ອງປະດັບໃນເຮືອນຂອງພຣະເຈົ້າ, ພວກເຂົາເປັນຕົວຍຶດ ແລະ ພວກເຂົາເປັນຂີ້ເຫຍື້ອ ແລະ ພຣະເຈົ້າບໍ່ນຳໃຊ້ພວກເຂົາ. ບໍ່ພຽງແຕ່ບໍ່ມີໂອກາດທີ່ພາລະກິດຂອງພຣະວິນຍານບໍລິສຸດຈະເຮັດພາລະກິດໃນພວກເຂົາ, ບໍ່ມີຄຸນຄ່າໃນການເຮັດໃຫ້ພວກເຂົາສົມບູນແບບເລີຍ. ຄົນປະເພດນີ້ຊາກສົບຍ່າງໄດ້ແທ້ໆ. ພວກເຂົາບໍ່ມີສ່ວນໃດທີ່ພຣະວິນຍານບໍລິສຸດສາມາດນຳໃຊ້ໄດ້, ພວກເຂົາຖືກຄອບງຳທັງໝົດ ແລະ ຖືກເຮັດໃຫ້ເສື່ອມຊາມຢ່າງໜັກໂດຍຊາຕານ. ພຣະເຈົ້າຈະໂຍນຄົນເຫຼົ່ານີ້ອອກໃຫ້ໝົດ. ເມື່ອພຣະວິນຍານບໍລິສຸດນຳໃຊ້ຜູ້ຄົນໃນມື້ນີ້, ພຣະອົງບໍ່ພຽງແຕ່ນຳໃຊ້ພາກສ່ວນທີ່ເປັນປະໂຫຍດຂອງພວກເຂົາເພື່ອເຮັດໃຫ້ສິ່ງນັ້ນສຳເລັດເທົ່ານັ້ນ ແຕ່ພຣະອົງຍັງເຮັດໃຫ້ສົມບູນ ແລະ ປ່ຽນແປງສ່ວນຕ່າງໆຂອງພວກເຂົາທີ່ບໍ່ເປັນປະໂຫຍດ. ຖ້າເຈົ້າສາມາດຖອກເທຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ ແລະ ສະຫງົບຕໍ່ໜ້າພຣະອົງ, ແລ້ວເຈົ້າກໍຈະມີໂອກາດ ແລະ ມີຄຸນສົມບັດເພື່ອໃຫ້ພຣະວິນຍານບໍລິສຸດນຳໃຊ້ ແລະ ຮັບຄວາມສະຫວ່າງ ແລະ ແສງເຍືອງທາງຈາກພຣະອົງ. ຍິ່ງໄປກວ່ານັ້ນ, ເຈົ້າກໍຈະມີໂອກາດໃຫ້ພຣະວິນຍານບໍລິສຸດແກ້ໄຂຄວາມບົກຜ່ອງຂອງເຈົ້າ. ເມື່ອເຈົ້າມອບຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ, ໃນທາງບວກເຈົ້າຈະສາມາດໄດ້ຮັບທາງເຂົ້າທີ່ເລິກຊຶ້ງຂຶ້ນ ແລະ ໄດ້ຮັບຄວາມຢັ່ງຮູ້ໃນລະດັບທີ່ສູງຂຶ້ນ; ໃນທາງລົບ, ເຈົ້າຈະມີຄວາມຮູ້ຫຼາຍຂຶ້ນກ່ຽວກັບຄວາມບົກຜ່ອງ ແລະ ຂໍ້ຜິດພາດຂອງເຈົ້າ ແລະ ເຈົ້າຈະຊອກຫາຫຼາຍຂຶ້ນ ແລະ ສະແຫວງຫາຫຼາຍຂຶ້ນເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ຍິ່ງໄປກວ່ານັ້ນ, ເຈົ້າຈະບໍ່ຂີ້ຄ້ານ ເຈົ້າຈະສາມາດກ້າວເຂົ້າສູ່ຢ່າງຫ້າວຫັນ. ສິ່ງນີ້ສະແດງວ່າເຈົ້າເປັນຄົນຖືກຕ້ອງ. ໂດຍ

ສັນນິດຖານວ່າ ຫົວໃຈຂອງເຈົ້າຍັງຄົງສະຫງົບຕໍ່ໜ້າພຣະເຈົ້າ, ແລ້ວບໍ່ວ່າເຈົ້າຈະໄດ້ຮັບຄຳຍົກຍ້ອງຈາກພຣະວິນຍານບໍລິສຸດ ຫຼື ບໍ່ ແລະ ເຈົ້າຈະເຮັດໃຫ້ພຣະເຈົ້າເພິ່ງພໍໃຈໄດ້ ຫຼື ບໍ່ນັ້ນແມ່ນຂຶ້ນກັບວ່າເຈົ້າກ້າວເຂົ້າສູ່ຢ່າງຫ້າວຫັນ ຫຼື ບໍ່. ເມື່ອພຣະວິນຍານບໍລິສຸດມອບແສງສະຫວ່າງໃຫ້ແກ່ຜູ້ຄົນ ແລະ ນຳໃຊ້ພວກເຂົາ, ພຣະອົງຈະບໍ່ເຮັດໃຫ້ພວກເຂົາຄິດລົບ, ພຣະອົງຈະເຮັດໃຫ້ພວກເຂົາກ້າວໜ້າຢ່າງຫ້າວຫັນຢູ່ສະເໝີ. ແລ້ວເມື່ອພຣະອົງເຮັດເຊັ່ນນີ້, ຜູ້ຄົນຍັງມີຈຸດອ່ອນ ແຕ່ພວກເຂົາບໍ່ດຳລົງຊີວິດຕາມສິ່ງເຫຼົ່ານັ້ນ. ພວກເຂົາບໍ່ໄດ້ປ່ອຍວາງຄວາມກ້າວໜ້າໃນຊີວິດຂອງພວກເຂົາ ແລະ ພວກເຂົາສືບຕໍ່ປະຕິບັດໃຫ້ໄດ້ຕາມຄວາມປະສົງຂອງພຣະເຈົ້າ. ສິ່ງນີ້ຄືມາດຕະຖານ. ຖ້າເຈົ້າສາມາດບັນລຸສິ່ງນີ້ ມັນກໍພິສູດວ່າ ເຈົ້າໄດ້ຮັບການສະຖິດຢູ່ຂອງພຣະວິນຍານບໍລິສຸດ. ຖ້າຄົນໃດຄົນໜຶ່ງຄິດລົບຢູ່ສະເໝີ ແລະ ເຖິງແມ່ນວ່າຫຼັງຈາກຄົນນັ້ນໄດ້ຮັບຄວາມສະຫວ່າງ ແລະ ມາຮູ້ຈັກຕົນເອງ, ຖ້າພວກເຂົາຍັງຄິດລົບ ແລະ ຢູ່ຊື່ໆ ແລະ ພວກເຂົາບໍ່ສາມາດລຸກຂຶ້ນ ແລະ ເຮັດວຽກກັບພຣະເຈົ້າ, ແລ້ວພວກເຂົາພຽງແຕ່ໄດ້ຮັບພຣະຄຸນຂອງພຣະເຈົ້າ ແລະ ພຣະວິນຍານບໍລິສຸດບໍ່ໄດ້ຢູ່ກັບພວກເຂົາ. ສະພາວະລົບໆຂອງພວກເຂົາໝາຍຄວາມວ່າຫົວໃຈຂອງພວກເຂົາຍັງບໍ່ໄດ້ຫັນເຂົ້າຫາພຣະເຈົ້າ ແລະ ວິນຍານຂອງພວກເຂົາກໍບໍ່ໄດ້ຮັບການດົນໃຈຈາກພຣະວິນຍານຂອງພຣະເຈົ້າ. ທຸກຄົນຄວນຮັບຮູ້ທຸກສິ່ງນີ້.

ຜ່ານປະສົບການ, ມັນສາມາດເຫັນໄດ້ວ່າການສະຫງົບຫົວໃຈຂອງຄົນໆໜຶ່ງຕໍ່ໜ້າພຣະເຈົ້າຄືສິ່ງທີ່ສຳຄັນທີ່ສຸດ. ມັນກ່ຽວຂ້ອງກັບບັນຫາໃນຊີວິດຝ່າຍວິນຍານຂອງຜູ້ຄົນ ແລະ ຄວາມກ້າວໜ້າໃນຊີວິດ. ການທີ່ເຈົ້າສະແຫວງຫາຄວາມຈິງ ແລະ ການປ່ຽນແປງໃນອຸປະນິໄສຈະພຽງແຕ່ເກີດໝາກຜົນຖ້າຫົວໃຈຂອງເຈົ້າສະຫງົບຢູ່ຕໍ່ໜ້າພຣະເຈົ້າ. ສິ່ງນັ້ນເປັນຍ້ອນເຈົ້າໄດ້ເຂົ້າມາຢູ່ຕໍ່ໜ້າພຣະອົງທີ່ເປັນພາລະ, ເພາະເຈົ້າຮູ້ສຶກຢູ່ສະເໝີວ່າເຈົ້າກຳລັງຂາດໃນຫຼາຍທາງ, ມີຄວາມຈິງຫຼາຍປະການທີ່ເຈົ້າຈຳເປັນຕ້ອງຮູ້, ມີຄວາມເປັນຈິງຫຼາຍຢ່າງທີ່ເຈົ້າຈຳເປັນຕ້ອງໄດ້ສຳຜັດ ແລະ ເຈົ້າຄວນສະແດງຄວາມຄຳນຶງເຖິງຄວາມປະສົງຂອງພຣະເຈົ້າ; ສິ່ງເຫຼົ່ານີ້ຢູ່ໃນຄວາມຄິດຂອງເຈົ້າຢູ່ຕະຫຼອດ, ມັນຮູ້ສຶກຄືກັບວ່າພວກມັນກຳລັງເຕັງເຈົ້າລົງຈົນຫາຍໃຈບໍ່ອອກ ແລ້ວດ້ວຍເຫດນັ້ນເຈົ້າຈຶ່ງຮູ້ສຶກໜັກໃຈ (ແຕ່ເຈົ້າບໍ່ໄດ້ຢູ່ໃນສະພາວະລົບໆ). ມີແຕ່ຄົນເຊັ່ນນີ້ເທົ່ານັ້ນຈຶ່ງມີຄຸນສົມບັດທີ່ຈະຍອມຮັບເອົາຄວາມສະຫວ່າງແຫ່ງພຣະທຳຂອງພຣະເຈົ້າ ແລະ ການດົນໃຈຈາກພຣະວິນຍານຂອງພຣະເຈົ້າ. ມັນເປັນຍ້ອນພາລະຂອງພວກເຂົາ, ເພາະພວກເຂົາໜັກໃຈ ແລະ ມັນສາມາດເວົ້າໄດ້ວ່າ ຍ້ອນລາຄາທີ່ພວກເຂົາໄດ້ຈ່າຍ ແລະ ຄວາມທຸກທໍລະມານທີ່ພວກເຂົາໄດ້ຜ່ານຜ່າຕໍ່ໜ້າພຣະເຈົ້າ ພວກເຂົາຈຶ່ງໄດ້ຮັບຄວາມສະຫວ່າງ ແລະ ແສງເຍືອງທາງຈາກພຣະເຈົ້າ. ເພາະວ່າພຣະເຈົ້າບໍ່ໄດ້ປະຕິບັດຢ່າງພິເສດຕໍ່ບຸກຄົນໃດ. ພຣະອົງຍຸຕິທຳໃນການປະຕິບັດຕໍ່ຜູ້ຄົນສະເໝີ ແລະ ພຣະອົງບໍ່ໄດ້ໃຫ້ພອນຕໍ່ຜູ້ຄົນຢ່າງບໍ່ມີເຫດຜົນ ຫຼື ເງື່ອນໄຂ. ນີ້ແມ່ນລັກສະນະອຸປະນິໄສໜຶ່ງທີ່ຊອບທຳຂອງພຣະເຈົ້າ. ໃນຊີວິດຈິງ, ຄົນສ່ວນໃຫຍ່ບໍ່ທັນໄດ້ບັນລຸອານາເຂດນີ້. ຢ່າງໜ້ອຍທີ່ສຸດ, ຫົວໃຈຂອງພວກເຂົາກໍຍັງບໍ່ທັນຫັນເຂົ້າຫາພຣະເຈົ້າຢ່າງສົມບູນ, ສະນັ້ນຈຶ່ງຍັງບໍ່ມີການປ່ຽນແປງຢ່າງໃຫຍ່ຫຼວງໃດໆເລີຍໃນຊີວິດ-ອຸປະນິໄສຂອງພວກເຂົາ. ນີ້ເປັນຍ້ອນພວກເຂົາອາໄສຢູ່ໃນພຣະຄຸນຂອງພຣະເຈົ້າເທົ່ານັ້ນ ແລະ ພວກເຂົາຍັງບໍ່ທັນໄດ້ຮັບພາລະກິດຂອງ

ພຣະວິນຍານບໍລິສຸດ. ເກນເງື່ອນໄຂທີ່ຜູ້ຄົນຕ້ອງບັນລຸເພື່ອຖືກພຣະເຈົ້າໃຊ້ແມ່ນເປັນດັ່ງນີ້: ຫົວໃຈຂອງພວກເຂົາຕ້ອງຫັນເຂົ້າຫາພຣະເຈົ້າ, ພວກເຂົາຕ້ອງແບກຫາບເອົາພາລະແຫ່ງພຣະທຳຂອງພຣະອົງ, ພວກເຂົາມີຫົວໃຈທີ່ສະແຫວງຫາ ແລະ ພວກເຂົາຕ້ອງຕັ້ງໃຈທີ່ຈະສະແຫວງຫາຄວາມຈິງ. ມີພຽງຄົນເຫຼົ່ານີ້ເທົ່ານັ້ນຈຶ່ງຈະສາມາດໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ຮັບເອົາຄວາມສະຫວ່າງ ແລະ ແສງເຍືອງທາງໄດ້ຢູ່ເລື້ອຍໆ. ຢູ່ພາຍນອກ, ຄົນທີ່ພຣະເຈົ້າໃຊ້ປະໂຫຍດປາກົດຄືກັບວ່າຂາດເຫດຜົນ ແລະ ຄວາມສຳພັນທີ່ປົກກະຕິກັບຄົນອື່ນ, ແຕ່ວ່າພວກເຂົາເວົ້າຢ່າງລະມັດລະວັງ, ຢ່າງເໝາະສົມ ແລະ ສະຫງົບຫົວໃຈຢູ່ຕໍ່ໜ້າພຣະເຈົ້າຢູ່ສະເໝີ. ນີ້ຄືຄົນປະເພດທີ່ຄູ່ຄວນຈະຖືກພຣະວິນຍານບໍລິສຸດນຳໃຊ້ຢ່າງແນ່ນອນ. ຄົນເຫຼົ່ານີ້ທີ່ "ຂາດເຫດຜົນ" ທີ່ພຣະເຈົ້າກ່າວເຖິງນີ້ ເບິ່ງຄືວ່າບໍ່ມີຄວາມສຳພັນທີ່ປົກກະຕິກັບຄົນອື່ນ ແລະ ພວກເຂົາບໍ່ສົນໃຈຄວາມຮັກພາຍນອກ ຫຼື ການປະຕິບັດພາຍນອກ, ແຕ່ເມື່ອພວກເຂົາໂອ້ລົມເລື່ອງຝ່າຍວິນຍານ ພວກເຂົາສາມາດເປີດຫົວໃຈຂອງພວກເຂົາ ແລະ ຈັດໃຫ້ຄວາມສະຫວ່າງ ແລະ ແສງເຍືອງທາງໃຫ້ຄົນອື່ນຢ່າງບໍ່ເຫັນແກ່ຕົວ ເຊິ່ງພວກເຂົາໄດ້ຮັບຈາກປະສົບການຕົວຈິງຂອງພວກເຂົາຕໍ່ໜ້າພຣະເຈົ້າ. ນັ້ນແມ່ນວິທີທີ່ພວກເຂົາສະແດງຄວາມຮັກຂອງພວກເຂົາຕໍ່ພຣະເຈົ້າ ແລະ ປະຕິບັດໃຫ້ໄດ້ຕາມຄວາມປະສົງຂອງພຣະອົງ. ເມື່ອຄົນອື່ນປ້ອຍດ່າ ແລະ ເຍາະເຍີ້ຍພວກເຂົາ, ພວກເຂົາກໍຫຼີກລ່ຽງຈາກການໄດ້ຮັບອິດທິພົນຈາກຄົນ, ເລື່ອງ ຫຼື ສິ່ງຕ່າງໆທີ່ຢູ່ພາຍນອກ ແລະ ຍັງສະຫງົບຕໍ່ໜ້າພຣະເຈົ້າ. ມັນເບິ່ງຄືກັບວ່າພວກເຂົາມີຄວາມເຂົ້າໃຈທີ່ພິເສດຂອງພວກເຂົາເອງ. ບໍ່ວ່າຄົນອື່ນຈະເຮັດແນວໃດກໍຕາມ, ຫົວໃຈຂອງພວກເຂົາບໍ່ເຄີຍປະຖິ້ມພຣະເຈົ້າ. ເມື່ອຄົນອື່ນເວົ້າ ແລະ ຫົວຂວັນ, ຫົວໃຈຂອງພວກເຂົາກໍຍັງຢູ່ຕໍ່ໜ້າພຣະເຈົ້າ, ພວກເຂົາຕຶກຕອງພຣະທຳຂອງພຣະອົງ ຫຼື ອະທິຖານຫາພຣະເຈົ້າໃນຫົວໃຈຂອງພວກເຂົາຢ່າງງຽບໆ, ສະແຫວງຫາເຈດຕະນາຂອງພຣະອົງ. ຄົນເຫຼົ່ານີ້ບໍ່ເຄີຍໃຫ້ຄວາມສຳຄັນກັບການຮັກສາຄວາມສຳພັນທີ່ປົກກະຕິລະຫວ່າງບຸກຄົນ ແລະ ພວກເຂົາເບິ່ງຄືກັບວ່າບໍ່ມີປັດຊະຍາສຳລັບການດຳລົງຊີວິດ. ພວກເຂົາປາກົດວ່າສົດໃສ, ເປັນຕາຮັກແພງ ແລະ ໄຮ້ດຽງສາ, ແຕ່ພວກເຂົາຍັງມີຄວາມສະຫງົບພໍສົມຄວນ. ນີ້ແມ່ນລັກສະນະຂອງຄົນປະເພດທີ່ພຣະເຈົ້ານຳໃຊ້. ສິ່ງຕ່າງໆ ເຊັ່ນ: ປັດຊະຍາສຳລັບການດຳລົງຊີວິດ ຫຼື "ເຫດຜົນປົກກະຕິ" ພຽງແຕ່ບໍ່ສາມາດໃຊ້ໄດ້ກັບຄົນປະເພດນີ້. ພວກເຂົາໄດ້ຖອກເທຫົວໃຈທັງໝົດຂອງພວກເຂົາໃຫ້ພຣະທຳຂອງພຣະເຈົ້າແລ້ວ ແລະ ພວກເຂົາເບິ່ງຄືວ່າ ມີແຕ່ພຣະເຈົ້າເທົ່ານັ້ນຢູ່ໃນຫົວໃຈຂອງພວກເຂົາ. ຄົນປະເພດນີ້ເປັນຄົນທີ່ "ຂາດເຫດຜົນ" ທີ່ພຣະເຈົ້າກ່າວເຖິງ ແລະ ມັນເປັນຄົນປະເພດນີ້ແທ້ໆທີ່ພຣະເຈົ້ານຳໃຊ້. ເຄື່ອງໝາຍຂອງຄົນທີ່ພຣະເຈົ້ານຳໃຊ້ມີລັກສະນະຄື: ບໍ່ວ່າຢູ່ເມື່ອໃດ ຫຼື ຢູ່ໃສກໍຕາມ, ຫົວໃຈຂອງພວກເຂົາຢູ່ຕໍ່ໜ້າພຣະເຈົ້າຢູ່ສະເໝີ ແລະ ບໍ່ວ່າຄົນອື່ນອາດເຖິງວ່າຄົນອື່ນຈະໝົກໝຸ້ນໃນກິເລດຕັນຫາ ແລະ ຝ່າຍເນື້ອໜັງຫຼາຍປານໃດກໍຕາມ, ຫົວໃຈຂອງຄົນນີ້ກໍບໍ່ເຄີຍປະຖິ້ມພຣະເຈົ້າ ແລະ ພວກເຂົາບໍ່ຕິດຕາມຝູງຊົນ. ມີແຕ່ຄົນປະເພດນີ້ເທົ່ານັ້ນຈຶ່ງເໝາະສົມໃຫ້ພຣະເຈົ້ານຳໃຊ້ ແລະ ຄົນປະເພດນີ້ເທົ່ານັ້ນຈຶ່ງຖືກພຣະວິນຍານບໍລິສຸດເຮັດໃຫ້ສົມບູນ. ຖ້າເຈົ້າບໍ່ສາມາດບັນລຸສິ່ງນີ້ໄດ້, ແລ້ວເຈົ້າກໍບໍ່ມີຄຸນສົມບັດທີ່ຈະຖືກຮັບໂດຍພຣະເຈົ້າ ຫຼື ຖືກພຣະວິນຍານບໍລິສຸດເຮັດໃຫ້ສົມບູນ.

ຖ້າເຈົ້າຢາກສ້າງຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ, ຫົວໃຈຂອງເຈົ້າຕ້ອງຫັນເຂົ້າຫາພຣະອົງ; ໂດຍຖືເອົາສິ່ງນີ້ເປັນພື້ນຖານ ແລ້ວເຈົ້າກໍຈະມີຄວາມສຳພັນທີ່ປົກກະຕິກັບຄົນອື່ນເຊັ່ນກັນ. ຖ້າເຈົ້າບໍ່ມີຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ, ແລ້ວບໍ່ວ່າເຈົ້າຈະກະທຳສິ່ງໃດເພື່ອຮັກສາຄວາມສຳພັນຂອງເຈົ້າກັບຄົນອື່ນ, ບໍ່ວ່າເຈົ້າຈະເຮັດວຽກໜັກສໍ່າໃດ ຫຼື ບໍ່ວ່າເຈົ້າຈະທຸ້ມເທກຳລັງຫຼາຍສໍ່າໃດກໍຕາມ ມັນກໍຍັງເປັນພຽງປັດຊະຍາຂອງມະນຸດສຳລັບການດຳລົງຊີວິດ. ເຈົ້າຈະປົກປ້ອງຕຳແໜ່ງຂອງເຈົ້າຢູ່ທ່າມກາງຜູ້ຄົນ ແລະ ຮັກສາການຍົກຍ້ອງຂອງພວກເຂົາຜ່ານທັດສະນະຂອງມະນຸດ ແລະ ປັດຊະຍາຂອງມະນຸດ, ແທນທີ່ຈະສ້າງຄວາມສຳພັນລະຫວ່າງບຸກຄົນທີ່ເປັນປົກກະຕິຕາມພຣະທຳຂອງພຣະເຈົ້າ. ຖ້າເຈົ້າບໍ່ໃສ່ໃຈຄວາມສຳພັນກັບຜູ້ຄົນ ແລະ ຮັກສາຄວາມສຳພັນທີ່ປົກກະຕິກັບພຣະເຈົ້າແທນ, ຖ້າເຈົ້າເຕັມໃຈທີ່ຈະມອບຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ ແລະ ຮຽນຮູ້ທີ່ຈະເຊື່ອຟັງພຣະອົງ, ແລ້ວຄວາມສຳພັນລະຫວ່າງບຸກຄົນຂອງເຈົ້າກໍຈະເປັນປົກກະຕິຢ່າງທຳມະຊາດ. ແລ້ວຄວາມສຳພັນເຫຼົ່ານີ້ຈະບໍ່ຖືກສ້າງຂຶ້ນບົນພື້ນຖານຂອງເນື້ອໜັງ, ແຕ່ຖືກສ້າງຂຶ້ນບົນພື້ນຖານແຫ່ງຄວາມຮັກພຣະເຈົ້າ. ເຈົ້າຈະເກືອບບໍ່ມີປະຕິກິລິຍາໃດໆທາງຝ່າຍເນື້ອໜັງກັບຄົນອື່ນ, ແຕ່ໃນລະດັບຝ່າຍວິນຍານແມ່ນຈະເປັນການໂອ້ລົມ ແລະ ຄວາມຮັກທີ່ມີຮ່ວມກັນ, ຄວາມປອບໃຈ ແລະ ການຈັດໃຫ້ລະຫວ່າງພວກເຈົ້າ. ສິ່ງທັງໝົດນີ້ເກີດຂຶ້ນບົນພື້ນຖານແຫ່ງຄວາມປາຖະໜາທີ່ເຮັດໃຫ້ພຣະເຈົ້າພໍໃຈ. ຄວາມສຳພັນເຫຼົ່ານີ້ບໍ່ໄດ້ດຳເນີນໄປຜ່ານປັດຊະຍາຂອງມະນຸດສຳລັບການດຳລົງຊີວິດ, ພວກມັນຖືກສ້າງຂຶ້ນໂດຍເປັນທຳມະຊາດເມື່ອຄົນໃດໜຶ່ງແບກຮັບພາລະສຳລັບພຣະເຈົ້າ. ພວກເຂົາບໍ່ຈຳເປັນຕ້ອງໃຊ້ຄວາມພະຍາຍາມຂອງມະນຸດທີ່ປະດິດຂຶ້ນຈາກເຈົ້າ, ເຈົ້າຕ້ອງການພຽງແຕ່ປະຕິບັດອີງຕາມຫຼັກການແຫ່ງພຣະທຳຂອງພຣະເຈົ້າ. ເຈົ້າເຕັມໃຈທີ່ຈະພິຈາລະນາຄວາມປະສົງຂອງພຣະເຈົ້າບໍ? ເຈົ້າພ້ອມທີ່ຈະເປັນຄົນ "ຂາດເຫດຜົນ" ຕໍ່ໜ້າພຣະອົງບໍ? ເຈົ້າເຕັມໃຈທີ່ຈະມອບຫົວໃຈຂອງເຈົ້າທັງໝົດໃຫ້ກັບພຣະເຈົ້າບໍ ແລະ ໂຍນຖິ້ມຕຳແໜ່ງຂອງເຈົ້າຢູ່ທ່າມກາງຄົນອື່ນ? ໃນບັນດາຄົນທັງໝົດທີ່ເຈົ້າຄົບຫາ ເຈົ້າມີຄວາມສຳພັນທີ່ດີທີ່ສຸດກັບຄົນໃດບໍ? ເຈົ້າມີຄວາມສຳພັນທີ່ຕໍ່າທີ່ສຸດກັບຄົນໃດບໍ? ຄວາມສຳພັນຂອງເຈົ້າກັບຜູ້ຄົນເປັນປົກກະຕິບໍ? ເຈົ້າປະຕິບັດຕໍ່ທຸກຄົນຢ່າງເທົ່າທຽມກັນບໍ? ຄວາມສຳພັນຂອງເຈົ້າກັບຄົນອື່ນດຳເນີນໄປຕາມປັດຊະຍາສຳລັບການດຳລົງຊີວິດ ຫຼື ພວກມັນຖືກສ້າງຂຶ້ນບົນພື້ນຖານແຫ່ງຄວາມຮັກພຣະເຈົ້າ? ເມື່ອຜູ້ຄົນບໍ່ມອບໃຈໃຫ້ກັບພຣະເຈົ້າ, ວິນຍານຂອງພວກເຂົາເລີ່ມຂີ້ຄ້ານ, ມຶນຊາ ແລະ ຂາດສະຕິ. ຄົນປະເພດນີ້ຈະບໍ່ມີມື້ເຂົ້າໃຈພຣະທຳຂອງພຣະເຈົ້າ, ພວກເຂົາຈະບໍ່ມີມື້ມີຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ ແລະ ພວກເຂົາຈະບໍ່ບັນລຸການປ່ຽນແປງໃນອຸປະນິໄສຂອງພວກເຂົາຈັກເທື່ອ. ການປ່ຽນແປງອຸປະນິໄສຂອງຄົນຜູ້ໜຶ່ງແມ່ນຂະບວນການມອບໃຈຂອງຄົນໆໜຶ່ງໃຫ້ກັບພຣະເຈົ້າຢ່າງສົມບູນ ແລະ ຮັບເອົາຄວາມສະຫວ່າງ ແລະ ແສງເຍືອງທາງຈາກພຣະທຳຂອງພຣະອົງ. ພາລະກິດຂອງພຣະເຈົ້າເຮັດໃຫ້ຜູ້ຄົນສາມາດເຂົ້າສູ່ຄວາມຈິງຢ່າງຫ້າວຫັນ ແລະ ມັນເຮັດໃຫ້ພວກເຂົາສາມາດປະຖິ້ມສິ່ງບໍ່ດີຈາກພວກເຂົາເອງ ຫຼັງຈາກທີ່ໄດ້ຮັບຄວາມຮູ້ກ່ຽວກັບພວກເຂົາ. ເມື່ອເຈົ້າໄດ້ມອບຫົວໃຈຂອງເຈົ້າໃຫ້ແກ່ພຣະເຈົ້າ, ເຈົ້າຈະສາມາດສຳນຶກທຸກຄັ້ງທີ່ວິນຍານຂອງເຈົ້າມີການດົນບັນດານໜ້ອຍໜຶ່ງ ແລະ ຮູ້ທຸກສ່ວນໃນ

ຄວາມສະຫວ່າງ ແລະ ແສງເຍືອງຂອງພຣະເຈົ້າ. ຖ້າເຈົ້າບາກບັ່ນ, ເຈົ້າຈະ ກ້າວເຂົ້າສູ່ເສັ້ນທາງທີ່ຈະຖືກພຣະວິນຍານບໍລິສຸດເຮັດໃຫ້ສົມບູນເທື່ອລະໜ້ອຍ. ຍິ່ງຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າຫຼາຍສໍ່າໃດ, ວິນຍານຂອງເຈົ້າກໍຍິ່ງຈະລະອຽດອ່ອນ ແລະ ອ່ອນໂຍນຂຶ້ນເທົ່ານັ້ນ, ມັນຈະສາມາດສໍາຜັດເຖິງວິທີທີ່ພຣະວິນຍານບໍລິສຸດຂັບເຄື່ອນມັນຍິ່ງຂຶ້ນ ແລະ ຄວາມສໍາພັນຂອງເຈົ້າຕໍ່ພຣະເຈົ້າກໍຈະຍິ່ງປົກກະຕິຂຶ້ນ. ຄວາມສໍາພັນທີ່ປົກກະຕິລະຫວ່າງບຸກຄົນແມ່ນເກີດຂຶ້ນບົນພື້ນຖານຂອງການຫັນຫົວໃຈຂອງຄົນໆໜຶ່ງໃຫ້ກັບພຣະເຈົ້າ, ບໍ່ແມ່ນຜ່ານຄວາມພະຍາຍາມຂອງມະນຸດ. ຖ້າບໍ່ມີພຣະເຈົ້າໃນຫົວໃຈຂອງບຸກຄົນ, ແລ້ວຄວາມສໍາພັນຂອງພວກເຂົາກັບຄົນອື່ນກໍເປັນພຽງຄວາມສໍາພັນຝ່າຍເນື້ອໜັງເທົ່ານັ້ນ. ພວກເຂົາບໍ່ປົກກະຕິ, ພວກເຂົາໝົກໝຸ້ນໃນກິເລດ ແລະ ພວກເຂົາຖືກພຣະເຈົ້າກຽດຊັງ ແລະ ລັງກຽດ. ຖ້າເຈົ້າເວົ້າວ່າວິນຍານຂອງເຈົ້າໄດ້ຮັບການບັນດານໃຈ ແຕ່ເຈົ້າເຕັມໃຈທີ່ຈະໂອ້ລົມກັບຜູ້ຄົນທີ່ເຈົ້າຖືກໃຈ ແລະ ນັບຖືເທົ່ານັ້ນ ແລະ ມີອະຄະຕິຕໍ່ເຈົ້າ ແລະ ປະຕິເສດທີ່ຈະເວົ້າກັບຜູ້ຄົນທີ່ເຈົ້າບໍ່ມັກເມື່ອພວກເຂົາມາສະແຫວງຫາຈາກເຈົ້າ, ສິ່ງນີ້ຍິ່ງເປັນເຄື່ອງພິສູດຫຼາຍວ່າເຈົ້າຖືກຄອບງໍາໂດຍອາລົມ ແລະ ເຈົ້າບໍ່ມີຄວາມສໍາພັນທີ່ເປັນປົກກະຕິກັບພຣະເຈົ້າເລີຍ. ມັນສະແດງວ່າເຈົ້າກໍາລັງພະຍາຍາມຫຼອກລວງພຣະເຈົ້າ ແລະ ປົກປິດຄວາມໜ້າລັງກຽດຂອງເຈົ້າເອງ. ເຈົ້າອາດຈະສາມາດແບ່ງປັນຄວາມຮູ້ບາງຢ່າງຂອງເຈົ້າ, ແຕ່ຖ້າເຈດຕະນາຂອງເຈົ້າບໍ່ຖືກຕ້ອງ ແລ້ວທຸກສິ່ງທີ່ເຈົ້າເຮັດແມ່ນດີໂດຍມາດຕະຖານຂອງມະນຸດເທົ່ານັ້ນ ແລະ ພຣະເຈົ້າຈະບໍ່ຍົກຍ້ອງເຈົ້າ. ການກະທໍາຂອງເຈົ້າຈະຖືກຂັບເຄື່ອນໂດຍເນື້ອໜັງຂອງເຈົ້າ, ບໍ່ແມ່ນໂດຍພາລະຂອງພຣະເຈົ້າ. ເຈົ້າພຽງແຕ່ຄູ່ຄວນທີ່ຖືກພຣະເຈົ້າໃຊ້ ຖ້າເຈົ້າສາມາດສະຫງົບຫົວໃຈຂອງເຈົ້າຕໍ່ໜ້າພຣະອົງ ແລະ ມີປະຕິກິລິຍາທີ່ປົກກະຕິຕໍ່ບັນດາຜູ້ທີ່ຮັກພຣະອົງ. ຖ້າເຈົ້າສາມາດເຮັດສິ່ງນັ້ນໄດ້, ແລ້ວບໍ່ວ່າເຈົ້າຈະໂຕ້ຕອບກັບຄົນອື່ນແນວໃດກໍຕາມ, ເຈົ້າຈະບໍ່ດໍາເນີນຕາມປັດຊະຍາສໍາລັບການດໍາລົງຊີວິດ, ເຈົ້າຈະພິຈາລະນາພາລະຂອງພຣະເຈົ້າ ແລະ ດໍາລົງຊີວິດຢູ່ຕໍ່ໜ້າພຣະອົງ. ທ່າມກາງພວກເຈົ້າມີຄົນລັກສະນະນີ້ຈັກຄົນ? ຄວາມສໍາພັນຂອງເຈົ້າກັບຄົນອື່ນປົກກະຕິແທ້ບໍ? ຄວາມສໍາພັນເຫຼົ່ານັ້ນສ້າງຂຶ້ນບົນພື້ນຖານຫຍັງ? ໃນໂຕເຈົ້າມີປັດຊະຍາແຫ່ງຊີວິດຈັກປະການ? ເຈົ້າໄດ້ປະຖິ້ມພວກມັນແລ້ວບໍ? ຖ້າຫົວໃຈຂອງເຈົ້າບໍ່ສາມາດຫັນເຂົ້າຫາພຣະເຈົ້າໄດ້ທັງໝົດ ແລ້ວເຈົ້າກໍບໍ່ໄດ້ມາຈາກພຣະເຈົ້າ, ເຈົ້າມາຈາກຊາຕານ, ໃນທີ່ສຸດເຈົ້າຈະກັບຄືນສູ່ຊາຕານ ແລະ ເຈົ້າບໍ່ສົມຄວນທີ່ຈະເປັນໜຶ່ງໃນປະຊາຊົນຂອງພຣະເຈົ້າ. ເຈົ້າຕ້ອງກວດສອບສິ່ງເຫຼົ່ານີ້ຢ່າງລະມັດລະວັງ.

# ຊີວິດທາງຈິດວິນຍານທຳມະດາ ນຳພາຄົນໄປສູ່ທາງທີ່ຖືກຕ້ອງ

ພວກເຈົ້າໄດ້ຍ່າງໃນສ່ວນທີ່ນ້ອຍຫຼາຍໃນເສັ້ນທາງຂອງຜູ້ທີ່ເຊື່ອໃນພຣະເຈົ້າເທົ່ານັ້ນ ແລະ ພວກເຈົ້າຍັງບໍ່ທັນໄດ້ເຂົ້າໄປຍ່າງໃນທາງທີ່ຖືກຕ້ອງເທື່ອ, ສະນັ້ນ ພວກເຈົ້າຍັງໄກການບັນລຸມາດຖານຂອງພຣະເຈົ້າ. ດຽວນີ້ ວຸດທິພາວະຂອງພວກເຈົ້າຍັງບໍ່ພຽງພໍເພື່ອຕອບສະໜອງຄວາມຕ້ອງການຂອງພຣະອົງ. ຍ້ອນຄວາມສາມາດຂອງພວກເຈົ້າ ແລະ ທຳມະຊາດອັນເສື່ອມຊາມຂອງພວກເຈົ້າ, ພວກເຈົ້າຈຶ່ງປະຕິບັດຕໍ່ພາລະກິດຂອງພຣະເຈົ້າຢ່າງບໍ່ລະມັດລະວັງ; ພວກເຈົ້າບໍ່ຈິງຈັງຕໍ່ພາລະກິດນັ້ນ. ສິ່ງນີ້ແມ່ນຄວາມບົກຜ່ອງທີ່ຮ້າຍແຮງທີ່ສຸດຂອງພວກເຈົ້າ. ບໍ່ມີຜູ້ໃດແທ້ໆທີ່ສາມາດຄົ້ນຫາເສັ້ນທາງທີ່ພຣະວິນຍານບໍລິສຸດຍ່າງ; ພວກເຈົ້າສ່ວນຫຼາຍບໍ່ເຂົ້າໃຈ ແລະ ເບິ່ງບໍ່ເຫັນທາງນັ້ນຢ່າງຈະແຈ້ງ. ຍິ່ງໄປກວ່ານັ້ນ ພວກເຈົ້າສ່ວນໃຫຍ່ຍັງບໍ່ໃສ່ໃຈຕໍ່ເລື່ອງນີ້, ແຮງໄກທີ່ພວກເຈົ້າຈະເອົາມັນໃສ່ໃນຫົວໃຈ. ຖ້າພວກເຈົ້າສືບຕໍ່ປະພຶດໃນລັກສະນະນີ້ ໂດຍໃຊ້ຊີວິດໂດຍບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ, ແລ້ວເສັ້ນທາງທີ່ພວກເຈົ້າຍ່າງຢູ່ໃນຖານະຜູ້ທີ່ເຊື່ອໃນພຣະເຈົ້າກໍໄຮ້ປະໂຫຍດ. ນີ້ກໍຍ້ອນວ່າ ພວກເຈົ້າບໍ່ເຮັດທຸກສິ່ງຕາມກຳລັງຂອງພວກເຈົ້າ ເພື່ອສະແຫວງຫາໃຫ້ບັນລຸຕາມຄວາມປະສົງຂອງພຣະເຈົ້າ ແລະ ຍ້ອນວ່າພວກເຈົ້າບໍ່ຮ່ວມມືກັບພຣະເຈົ້າເປັນຢ່າງດີ. ມັນບໍ່ແມ່ນຍ້ອນພຣະເຈົ້າບໍ່ໄດ້ເຮັດພາລະກິດໃນຕົວເຈົ້າ ຫຼື ຍ້ອນວ່າ ພຣະວິນຍານບໍລິສຸດບໍ່ໄດ້ດົນບັນດານໃຈເຈົ້າ. ມັນແມ່ນຍ້ອນເຈົ້າບໍ່ລະມັດລະວັງຫຼາຍ, ເຈົ້າຈຶ່ງບໍ່ຈິງຈັງຕໍ່ພາລະກິດຂອງພຣະວິນຍານບໍລິສຸດ. ພວກເຈົ້າຕ້ອງໄດ້ຫັນປ່ຽນສະຖານະການນີ້ຢ່າງຮີບດ່ວນ ແລະ ຍ່າງຕາມເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາຜູ້ຄົນ. ນີ້ແມ່ນຫົວຂໍ້ຫຼັກສຳລັບມື້ນີ້. "ເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາໄປ" ໝາຍເຖິງ ການໄດ້ຮັບແສງສະຫວ່າງໃນຈິດວິນຍານ; ການມີຄວາມຮູ້ກ່ຽວກັບພຣະທຳຂອງພຣະເຈົ້າ; ການຮັບຄວາມຊັດເຈນກ່ຽວກັບເສັ້ນທາງທີ່ຢູ່ຕໍ່ໜ້າ; ການທີ່ສາມາດເຂົ້າສູ່ຄວາມຈິງເທື່ອລະກ້າວ; ແລະ ການມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບພຣະເຈົ້າ. ເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາຜູ້ຄົນໄປ ແມ່ນເສັ້ນທາງສູ່ການເຂົ້າໃຈທີ່ຊັດເຈນຍິ່ງຂຶ້ນໃນພຣະທຳຂອງພຣະເຈົ້າເປັນຫຼັກ, ປາສະຈາກການຫັນເຫ ແລະ ແນວຄິດຜິດໆ ແລະ ຄົນທີ່ຍ່າງໃນເສັ້ນທາງນັ້ນກໍຍ່າງໄປຊື່ໆຕາມເສັ້ນທາງ. ເພື່ອໃຫ້ບັນລຸສິ່ງນີ້ ພວກເຈົ້າຈຳເປັນຕ້ອງປອງດອງກັບພຣະເຈົ້າ, ຊອກຫາເສັ້ນທາງທີ່ຖືກຕ້ອງເພື່ອປະຕິບັດ ແລະ ຍ່າງໃນເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາໄປ. ສິ່ງນີ້ປະກອບມີການຮ່ວມມືໃນສ່ວນຂອງມະນຸດ ເຊິ່ງໝາຍເຖິງສິ່ງທີ່ພວກເຈົ້າຕ້ອງເຮັດເພື່ອບັນລຸຕາມເງື່ອນໄຂຂອງພຣະເຈົ້າສຳລັບພວກເຈົ້າ ແລະ ວິທີທີ່ພວກເຈົ້າຕ້ອງປະພຶດ ເພື່ອເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງການເຊື່ອໃນພຣະເຈົ້າ.

ການກ້າວສູ່ເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາໄປອາດເບິ່ງຄືສັບສົນ, ແຕ່ເຈົ້າຈະພົບວ່າມັນງ່າຍກວ່າຫຼາຍ ເມື່ອເສັ້ນທາງແຫ່ງການປະຕິບັດຊັດເຈນສຳລັບເຈົ້າ. ຄວາມຈິງແມ່ນ ຜູ້ຄົນສາມາດເຮັດທຸກສິ່ງທີ່ພຣະເຈົ້າຮຽກຮ້ອງຈາກພວກເຂົາ, ມັນບໍ່ຄືກັບວ່າພຣະອົງກຳລັງພະຍາຍາມສອນໝູໃຫ້ບິນ.

ໃນທຸກສະຖານະການ ພຣະເຈົ້າພະຍາຍາມແກ້ໄຂບັນຫາຂອງຜູ້ຄົນ ແລະ ແກ້ໄຂຄວາມກັງວົນຂອງພວກເຂົາ. ພວກເຈົ້າທຸກຄົນຕ້ອງເຂົ້າໃຈສິ່ງນີ້; ຢ່າເຂົ້າໃຈພຣະເຈົ້າຢ່າງຜິດໆ. ຜູ້ຄົນຖືກນຳພາຕາມພຣະທຳຂອງພຣະເຈົ້າຕາມເສັ້ນທາງທີ່ພຣະວິນຍານບໍລິສຸດຍ່າງ. ດັ່ງທີ່ໄດ້ກ່າວມາແລ້ວ, ພວກເຈົ້າຕ້ອງມອບໃຈໃຫ້ພຣະເຈົ້າ. ນີ້ແມ່ນເງື່ອນໄຂກ່ອນໜ້າຂອງການຍ່າງຕາມເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາໄປ. ພວກເຈົ້າຕ້ອງເຮັດສິ່ງນີ້ ເພື່ອເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ຄົນຜູ້ໜຶ່ງຈະເຮັດວຽກໃນການມອບຫົວໃຈຂອງພວກເຂົາໃຫ້ແກ່ພຣະເຈົ້າຢ່າງມີສະຕິໄດ້ແນວໃດ? ໃນຊີວິດປະຈຳວັນຂອງພວກເຈົ້າ, ເມື່ອພວກເຈົ້າສຳຜັດກັບພາລະກິດຂອງພຣະເຈົ້າ ແລະ ອະທິຖານຫາພຣະອົງ, ພວກເຈົ້າກໍເຮັດແບບບໍ່ໃສ່ໃຈ. ພວກເຈົ້າອະທິຖານຫາພຣະເຈົ້າໃນຂະນະທີ່ພວກເຈົ້າເຮັດວຽກ. ສາມາດເອີ້ນສິ່ງນີ້ວ່າ ເປັນການມອບໃຈໃຫ້ພຣະເຈົ້າໄດ້ບໍ? ພວກເຈົ້າກຳລັງພາກັນຄິດເລື່ອງວຽກເຮືອນວຽກຊານ ຫຼື ເລື່ອງເນື້ອໜັງຢູ່; ພວກເຈົ້າສອງຈິດສອງໃຈຢູ່ຕະຫຼອດເວລາ. ສາມາດຖືເອົາສິ່ງນີ້ ເປັນການເຮັດໃຫ້ໃຈສະຫງົບຕໍ່ໜ້າພຣະເຈົ້າໄດ້ບໍ? ນີ້ກໍຍ້ອນວ່າ ຫົວໃຈຂອງເຈົ້າຍຶດຕິດຢູ່ກັບເລື່ອງພາຍນອກຕະຫຼອດເວລາ ແລະ ບໍ່ສາມາດຫັນກັບໄປຫາພຣະເຈົ້າ. ຖ້າພວກເຈົ້າປາຖະໜາທີ່ຈະເຮັດໃຈສະຫງົບຕໍ່ໜ້າພຣະເຈົ້າແທ້ໆ ແລ້ວພວກເຈົ້າກໍຕ້ອງເຮັດວຽກແຫ່ງການຮ່ວມມືຢ່າງມີສະຕິ. ນີ້ໝາຍຄວາມວ່າພວກເຈົ້າທຸກຄົນຕ້ອງມີເວລາສຳລັບການອຸທິດຕົນຂອງພວກເຈົ້າ, ເວລາທີ່ທ່ານປະວາງຜູ້ຄົນ, ເຫດການ ແລະ ສິ່ງຕ່າງໆ; ເຮັດໃຫ້ຫົວຂອງໃຈສະຫງົບ ແລະ ເຮັດໃຫ້ຕົນເອງງຽບຢູ່ຕໍ່ໜ້າພຣະເຈົ້າ. ທຸກຄົນຕ້ອງເກັບຮັກສາປຶ້ມບັນທຶກການອຸທິດຕົນສ່ວນຕົວ ໂດຍບັນທຶກຄວາມຮູ້ຂອງຕົນກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ວິທີທີ່ຈິດວິນຍານຂອງພວກເຈົ້າຖືກດົນບັນດານ ບໍ່ວ່າສິ່ງທີ່ພວກເຈົ້າບັນທຶກນັ້ນຈະເລິກເຊິ່ງ ຫຼື ເປັນໄປຕາມຜິວເຜີນກໍຕາມ; ທຸກຄົນຕ້ອງສະຫງົບໃຈຂອງພວກເຂົາຢ່າງມີສະຕິຕໍ່ໜ້າພຣະເຈົ້າ. ຖ້າເຈົ້າສາມາດອຸທິດເວລາໜຶ່ງ ຫຼື ສອງຊົ່ວໂມງໃນແຕ່ລະມື້ສຳລັບຊີວິດທາງຈິດວິນຍານທີ່ແທ້ຈິງ, ແລ້ວຊີວິດຂອງເຈົ້າໃນມື້ນັ້ນກໍຈະຮູ້ສຶກສົມບູນ ແລະ ຫົວໃຈຂອງເຈົ້າກໍຈະສົດໃສ ແລະ ປອດໂປ່ງ. ຖ້າເຈົ້າດຳເນີນຊີວິດທາງຈິດວິນຍານໃນລັກສະນະນີ້ໃນທຸກໆມື້, ແລ້ວຫົວໃຈຂອງເຈົ້າກໍຈະສາມາດກັບຄືນຫາພຣະເຈົ້າຫຼາຍຂຶ້ນ, ຈິດວິນຍານຂອງເຈົ້າກໍຈະເຂັ້ມແຂງຍິ່ງຂຶ້ນເລື້ອຍໆ, ສະພາບຂອງເຈົ້າກໍຈະດີຂຶ້ນຢ່າງສະໝໍ່າສະເໝີ, ເຈົ້າຈະສາມາດຍ່າງຕາມເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາໄປໄດ້ຫຼາຍຂຶ້ນ ແລະ ພຣະເຈົ້າຈະປະທານພອນໃຫ້ເຈົ້າຫຼາຍຂຶ້ນ. ຈຸດປະສົງຂອງຊີວິດທາງຈິດວິນຍານຂອງພວກເຈົ້າແມ່ນການໄດ້ຮັບການສະຖິດຂອງພຣະວິນຍານບໍລິສຸດຢ່າງມີສະຕິ. ມັນບໍ່ແມ່ນການປະຕິບັດກົດລະບຽບ ຫຼື ການປະກອບພິທີຕ່າງໆທາງສາສະໜາ ແຕ່ແມ່ນການປະຕິບັດຕາມພຣະເຈົ້າຢ່າງແທ້ຈິງ, ການລົງວິໄນຮ່າງກາຍຂອງເຈົ້າຢ່າງແທ້ຈິງ. ນີ້ແມ່ນສິ່ງທີ່ມະນຸດຄວນເຮັດ, ສະນັ້ນພວກເຈົ້າຄວນເຮັດສິ່ງນີ້ດ້ວຍຄວາມພະຍາຍາມສູງສຸດ. ຍິ່ງເຈົ້າໃຫ້ຄວາມຮ່ວມມື ແລະ ຍິ່ງເຈົ້າພະຍາຍາມຫຼາຍເທົ່າໃດ ຫົວໃຈຂອງເຈົ້າກໍຍິ່ງຈະສາມາດກັບຄືນຫາເຂົ້າຫາພຣະເຈົ້າໄດ້ຫຼາຍເທົ່ານັ້ນ ແລະ ເຈົ້າກໍຈະສາມາດສະຫງົບຫົວໃຈຂອງເຈົ້າຕໍ່ໜ້າພຣະອົງຫຼາຍຂຶ້ນເທົ່ານັ້ນ. ໃນຈຸດໃດໜຶ່ງ, ພຣະເຈົ້າຈະຮັບເອົາຫົວໃຈຂອງເຈົ້າຢ່າງຄົບຖ້ວນ. ບໍ່ມີຜູ້ໃດຈະສາມາດໂນ້ມນ້າວ ຫຼື ຍຶດເອົາຫົວໃຈຂອງເຈົ້າໄປ

ໄດ້ ແລະ ເຈົ້າກໍຈະເປັນຂອງພຣະເຈົ້າຢ່າງສົມບູນ. ຖ້າເຈົ້າຍ່າງຕາມເສັ້ນທາງນີ້ ແລ້ວພຣະທຳຂອງພຣະເຈົ້າກໍຈະເປີດເຜີຍຕໍ່ເຈົ້າໃນທຸກເວລາ ແລະ ສ່ອງແສງໃຫ້ແກ່ເຈົ້າກ່ຽວກັບທຸກສິ່ງທີ່ເຈົ້າບໍ່ເຂົ້າໃຈ ເຊິ່ງສິ່ງນີ້ແມ່ນສາມາດບັນລຸຜ່ານການຮ່ວມມືຂອງເຈົ້າເທົ່ານັ້ນ. ນີ້ຄືເຫດຜົນທີ່ວ່າເປັນຫຍັງພຣະເຈົ້າຈຶ່ງກ່າວສະເໝີວ່າ "ສຳລັບທຸກຄົນທີ່ຮ່ວມມືເຮົາ, ເຮົາຈະໃຫ້ລາງວັນສອງເທົ່າ". ພວກເຈົ້າຕ້ອງເບິ່ງເຫັນເສັ້ນທາງນີ້ຢ່າງແຈ່ມແຈ້ງ. ຖ້າພວກເຈົ້າປາດຖະໜາທີ່ຈະຍ່າງຕາມເສັ້ນທາງທີ່ຖືກຕ້ອງ ແລ້ວພວກເຈົ້າກໍຕ້ອງເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອໃຫ້ພຣະເຈົ້າພໍໃຈ. ພວກເຈົ້າຕ້ອງເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອໃຫ້ບັນລຸຊີວິດທາງຈິດວິນຍານ. ໃນໄລຍະເລີ່ມຕົ້ນ ເຈົ້າອາດຈະບໍ່ສາມາດບັນລຸຜົນໄດ້ເປັນຢ່າງດີໃນການສະແຫວງຫານີ້, ແຕ່ເຈົ້າຕ້ອງບໍ່ປ່ອຍໃຫ້ຕົນເອງຖົດຖອຍ ຫຼື ຈົມຢູ່ໃນຄວາມຄິດລົບ, ເຈົ້າຕ້ອງສືບຕໍ່ເຮັດວຽກໃຫ້ໜັກຂຶ້ນ! ຍິ່ງເຈົ້າມີຊີວິດທາງຈິດວິນຍານຫຼາຍເທົ່າໃດ, ຫົວໃຈຂອງເຈົ້າກໍຍິ່ງຖືກເຂົ້າຍຶດໂດຍພຣະທຳຂອງພຣະເຈົ້າຫຼາຍເທົ່ານັ້ນ, ກັງວົນກັບສິ່ງເຫຼົ່ານີ້ສະເໝີ, ແບກຮັບເອົາພາລະນີ້ຢູ່ສະເໝີ. ຫຼັງຈາກນັ້ນ ກໍເປີດເຜີຍຄວາມຈິງພາຍໃນທີ່ສຸດຂອງເຈົ້າຕໍ່ພຣະເຈົ້າຜ່ານຊີວິດທາງຈິດວິນຍານຂອງເຈົ້າ; ບອກພຣະອົງເຖິງສິ່ງທີ່ເຈົ້າເຕັມໃຈເຮັດ, ສິ່ງທີ່ເຈົ້າໄດ້ຄິດຄຳນຶງ, ຄວາມເຂົ້າໃຈ ແລະ ມຸມມອງຂອງເຈົ້າທີ່ມີຕໍ່ພຣະທຳຂອງພຣະເຈົ້າ. ຢ່າອິດກັ້ນສິ່ງໃດໄວ້, ບໍ່ແມ່ນແຕ່ໜ້ອຍດຽວ! ຝຶກເວົ້າຄຳເວົ້າທີ່ຢູ່ພາຍໃນຫົວໃຈຂອງເຈົ້າ ແລະ ເປີດເຜີຍຄວາມຮູ້ສຶກທີ່ແທ້ຈິງຂອງເຈົ້າໃຫ້ພຣະເຈົ້າ; ຖ້າມັນຢູ່ໃນຫົວໃຈຂອງເຈົ້າ, ແລ້ວໃຫ້ເວົ້າມັນໃນທຸກຮູບແບບ. ຍິ່ງເຈົ້າເວົ້າໃນລັກສະນະນີ້ຫຼາຍເທົ່າໃດ, ເຈົ້າກໍຍິ່ງຈະຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະເຈົ້າ ແລະ ພຣະເຈົ້າຈະດຶງຫົວໃຈຂອງເຈົ້າຢ່າງໜັກແໜ້ນຂຶ້ນ. ເມື່ອສິ່ງນີ້ເກີດຂຶ້ນ ເຈົ້າຈະຮູ້ສຶກວ່າ ພຣະເຈົ້າມີຄ່າຕໍ່ເຈົ້າຫຼາຍກວ່າຄົນອື່ນ. ເຈົ້າຈະບໍ່ຈາກພຣະອົງໄປຈັກເທື່ອ ເຖິງວ່າຈະເກີດຫຍັງຂຶ້ນກໍຕາມ. ຖ້າເຈົ້າປະຕິບັດການອຸທິດທາງຈິດວິນຍານໃນລັກສະນະນີ້ທຸກມື້ ແລະ ບໍ່ເອົາອອກຈາກຄວາມຄິດຂອງເຈົ້າ ແຕ່ປະຕິບັດກັບສິ່ງນັ້ນ ຄືດັ່ງວ່າມັນມີຄວາມສຳຄັນຫຼາຍໃນຊີວິດຂອງເຈົ້າ, ແລ້ວພຣະທຳຂອງພຣະເຈົ້າກໍຈະສະຖິດຢູ່ໃນຫົວໃຈຂອງເຈົ້າ. ນີ້ແມ່ນຄວາມໝາຍຂອງການຖືກພຣະວິນຍານບໍລິສຸດສຳຜັດ. ມັນຈະຄືກັບວ່າ ຫົວໃຈຂອງເຈົ້າຖືກພຣະເຈົ້າຄອບຄອງຢູ່ສະເໝີ, ຄືກັບວ່າ ສິ່ງທີ່ເຈົ້າຮັກແມ່ນຢູ່ໃນຫົວໃຈຂອງເຈົ້າຢູ່ສະເໝີ. ບໍ່ມີຜູ້ໃດສາມາດເອົາຄວາມຮູ້ສຶກນັ້ນໄປຈາກເຈົ້າໄດ້. ເມື່ອສິ່ງນີ້ເກີດຂຶ້ນ ພຣະເຈົ້າຈະອາໄສຢູ່ໃນໂຕເຈົ້າຢ່າງແທ້ຈິງ ແລະ ມີພື້ນທີ່ພາຍໃນຫົວໃຈຂອງເຈົ້າ.

# ຄຳສັນຍາຕໍ່ບັນດາຜູ້ທີ່ຖືກເຮັດໃຫ້ສົມບູນແບບ

ເສັ້ນທາງທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນແບບແມ່ນຫຍັງ? ລວມມີດ້ານໃດແດ່? ເຈົ້າເຕັມໃຈໃຫ້ພຣະເຈົ້າເຮັດໃຫ້ສົມບູນແບບບໍ? ເຈົ້າເຕັມໃຈຍອມຮັບການພິພາກສາ ແລະ ການລົງໂທດຂອງພຣະອົງບໍ? ເຈົ້າຮູ້ຫຍັງແດ່ກ່ຽວກັບຄຳຖາມເຫຼົ່ານີ້? ຖ້າເຈົ້າບໍ່ມີຄວາມຮູ້ທີ່ຈະກ່າວກ່ຽວກັບສິ່ງນີ້, ແລ້ວສິ່ງນີ້ພິສູດໃຫ້ເຫັນວ່າເຈົ້າຍັງບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ ເຊິ່ງເຈົ້າບໍ່ໄດ້ຖືກເຮັດໃຫ້ຮູ້ແຈ້ງໂດຍພຣະວິນຍານບໍລິສຸດແມ່ນແຕ່ໜ້ອຍດຽວ. ມັນເປັນໄປບໍ່ໄດ້ສຳລັບຜູ້ຄົນດັ່ງກ່າວຈະຖືກເຮັດໃຫ້ສົມບູນແບບ. ພວກເຂົາພຽງແຕ່ໄດ້ຮັບພຣະຄຸນຈຳນວນໜ້ອຍດຽວເທົ່ານັ້ນເພື່ອຊື່ນຊົມມັນໃນເວລາສັ້ນໆ ແລະ ສິ່ງນັ້ນຈະບໍ່ຍືນຍົງຄົງຕົວ. ຜູ້ຄົນບໍ່ສາມາດຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້ ຖ້າພວກເຂົາພຽງແຕ່ຊື່ນຊົມພຣະຄຸນຂອງພຣະອົງ. ບາງຄົນພໍໃຈເມື່ອເນື້ອໜັງຂອງພວກເຂົາມີຄວາມສະຫງົບສຸກ ແລະ ຄວາມຊື່ນບານ, ເມື່ອຊີວິດຂອງພວກເຂົາສະດວກສະບາຍໂດຍບໍ່ມີຄວາມທຸກຍາກ ຫຼື ຄວາມໂຊກຮ້າຍໃດໆ, ເມື່ອຄອບຄົວຂອງພວກເຂົາດຳລົງຊີວິດຢູ່ໃນຄວາມສະຫງົບສຸກໂດຍບໍ່ມີການຕໍ່ສູ້ ຫຼື ການຂັດແຍ້ງ ແລະ ພວກເຂົາອາດເຊື່ອວ່ານີ້ແມ່ນພຣະພອນຂອງພຣະເຈົ້າ, ແຕ່ໃນຄວາມຈິງແລ້ວ ມັນເປັນພຽງພຣະຄຸນຂອງພຣະເຈົ້າເທົ່ານັ້ນ. ພວກເຈົ້າບໍ່ຄວນພໍໃຈກັບການຊື່ນຊົມພຽງພຣະຄຸນຂອງພຣະເຈົ້າເທົ່ານັ້ນ. ຄວາມຄິດແບບນີ້ແມ່ນຫຍາບຊ້າຫຼາຍ. ເຖິງແມ່ນວ່າເຈົ້າອ່ານພຣະທຳຂອງພຣະເຈົ້າທຸກມື້, ອະທິຖານທຸກມື້ ແລະ ຈິດວິນຍານຂອງເຈົ້າຮູ້ສຶກເຖິງຄວາມຊື່ນຊົມຍິນດີຢ່າງຍິ່ງ ແລະ ມີຄວາມສະຫງົບສຸກເປັນພິເສດ, ແຕ່ທ້າຍສຸດແລ້ວ ຖ້າເຈົ້າບໍ່ມີສິ່ງໃດຈະເວົ້າເຖິງຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າ ແລະ ພາລະກິດຂອງພຣະອົງ ແລະ ບໍ່ມີປະສົບການຫຍັງເລີຍ; ບໍ່ວ່າເຈົ້າໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າຫຼາຍປານໃດກໍຕາມ, ຖ້າເຈົ້າພຽງແຕ່ຮູ້ສຶກເຖິງຄວາມສະຫງົບສຸກ ແລະ ຄວາມຊື່ນຊົມຍິນດີໃນຈິດວິນຍານຂອງເຈົ້າ ແລະ ພຣະທຳຂອງພຣະເຈົ້ານັ້ນຫວານເກີນກວ່າຈະປຽບທຽບໄດ້, ຄືກັບວ່າເຈົ້າບໍ່ສາມາດຊື່ນຊົມມັນໄດ້ຢ່າງພຽງພໍ, ແຕ່ເຈົ້າບໍ່ມີປະສົບການຕົວຈິງ ແລະ ຂາດຄວາມເປັນຈິງກ່ຽວກັບພຣະທຳຂອງພຣະເຈົ້າຢ່າງສິ້ນເຊີງ, ແລ້ວເຈົ້າຈະໄດ້ຮັບຫຍັງຈາກຄວາມສັດທາເຊັ່ນນັ້ນໃນພຣະເຈົ້າ? ຖ້າເຈົ້າບໍ່ສາມາດດຳເນີນຊີວິດຕາມແກ່ນແທ້ຂອງພຣະທຳພຣະເຈົ້າແລ້ວ, ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຄຳພາວະນາຂອງເຈົ້າແມ່ນບໍ່ມີຫຍັງ, ແຕ່ເປັນພຽງຄວາມເຊື່ອທາງດ້ານສາດສະໜາເທົ່ານັ້ນ. ພຣະເຈົ້າບໍ່ສາມາດເຮັດໃຫ້ຄົນເຊັ່ນນີ້ສົມບູນແບບໄດ້ ແລະ ບໍ່ສາມາດຮັບເອົາຄົນເຊັ່ນນີ້ໄດ້. ຄົນທີ່ຖືກຮັບເອົາໂດຍພຣະເຈົ້າແມ່ນຜູ້ທີ່ສະແຫວງຫາຄວາມຈິງ. ສິ່ງທີ່ພຣະເຈົ້າຮັບເອົາບໍ່ແມ່ນເນື້ອໜັງຂອງມະນຸດ, ບໍ່ແມ່ນສິ່ງທີ່ເປັນຂອງເຂົາ, ແຕ່ແມ່ນພາກສ່ວນທີ່ຢູ່ພາຍໃນຕົວເຂົາທີ່ເປັນຂອງພຣະເຈົ້າ. ສະນັ້ນ, ເມື່ອພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນແບບ ພຣະອົງບໍ່ໄດ້ເຮັດໃຫ້ເນື້ອໜັງຂອງພວກເຂົາສົມບູນແບບ, ແຕ່ແມ່ນຫົວໃຈຂອງພວກເຂົາ ເຊິ່ງເຮັດໃຫ້ຫົວໃຈຂອງພວກເຂົາຖືກຮັບເອົາໂດຍພຣະເຈົ້າ. ເວົ້າອີກຢ່າງໜຶ່ງກໍ່ຄື, ໃນແກ່ນແທ້ແລ້ວ ພຣະເຈົ້າເຮັດໃຫ້ມະນຸດສົມບູນແບບນັ້ນແມ່ນພຣະເຈົ້າເຮັດໃຫ້ຫົວໃຈຂອງມະນຸດສົມບູນແບບ ເພື່ອວ່າມະນຸດຈະຫັນມາຫາພຣະເຈົ້າ ແລະ ຮັກພຣະອົງ.

ເນື້ອໜັງຂອງມະນຸດນັ້ນຄືເລືອດເນື້ອ. ມັນບໍ່ມີຈຸດປະສົງຫຍັງສຳລັບພຣະເຈົ້າທີ່ຈະຮັບເອົາເນື້ອໜັງຂອງມະນຸດ, ເພາະເນື້ອໜັງຂອງມະນຸດຄືສິ່ງທີ່ເນົ່າເປື່ອຍຢ່າງບໍ່ມີທາງຫຼີກລ່ຽງໄດ້ ແລະ ບໍ່ສາມາດຮັບເອົາມໍລະດົກ ຫຼື ພຣະພອນຂອງພຣະອົງໄດ້. ຖ້າເນື້ອໜັງຂອງມະນຸດຖືກຮັບເອົາ ແລະ ພຽງແຕ່ເນື້ອໜັງຂອງມະນຸດຢູ່ໃນກະແສນີ້, ແລ້ວໃນທີ່ສຸດມະນຸດກໍຈະພຽງແຕ່ຢູ່ໃນກະແສນີ້ເທົ່ານັ້ນ ແລະ ຫົວໃຈຂອງພວກເຂົາກໍຈະເປັນຂອງຊາຕານ. ໃນກໍລະນີດັ່ງກ່າວ, ບໍ່ພຽງແຕ່ຜູ້ຄົນບໍ່ສາມາດເປັນທີ່ປະຈັກຂອງພຣະເຈົ້າເທົ່ານັ້ນ, ແຕ່ພວກເຂົາຈະກາຍເປັນພາລະຂອງພຣະເຈົ້າອີກດ້ວຍ ແລະ ດັ່ງນັ້ນ ການຄັດເລືອກເອົາຜູ້ຄົນຂອງພຣະເຈົ້າກໍ່ຈະບໍ່ມີຄວາມໝາຍຫຍັງເລີຍ. ບັນດາຜູ້ທີ່ພຣະເຈົ້າມີເຈດຕະນາເຮັດໃຫ້ສົມບູນແບບແມ່ນບັນດາຜູ້ທີ່ຈະໄດ້ຮັບພອນ ແລະ ມໍລະດົກຂອງພຣະອົງ. ນັ້ນໝາຍເຖິງ ພວກເຂົາຮັບເອົາໃນສິ່ງທີ່ພຣະເຈົ້າມີ ແລະ ເປັນ ເພື່ອວ່າມັນຈະກາຍເປັນສິ່ງທີ່ພວກເຂົາມີຢູ່ພາຍໃນ; ພວກເຂົາມີພຣະທຳທັງໝົດຂອງພຣະເຈົ້າທີ່ນຳມາສູ່ຕົວເຂົາ; ບໍ່ວ່າພຣະເຈົ້າຈະເປັນຫຍັງ, ພວກເຈົ້າສາມາດຮັບເອົາທຸກສິ່ງທີ່ເປັນ ແລະ ດ້ວຍເຫດນັ້ນຈຶ່ງດຳເນີນຊີວິດຕາມຄວາມຈິງ. ນີ້ແມ່ນປະເພດຄົນທີ່ພຣະເຈົ້າເຮັດໃຫ້ສົມບູນແບບ ແລະ ຜູ້ທີ່ຖືກຮັບເອົາໂດຍພຣະເຈົ້າ. ມີພຽງຜູ້ຄົນດັ່ງກ່າວນີ້ເທົ່ານັ້ນທີ່ມີສິດໄດ້ຮັບພອນທີ່ພຣະເຈົ້າປະທານໃຫ້:

1. ຮັບເອົາຄວາມຮັກທັງໝົດຂອງພຣະເຈົ້າ.
2. ປະຕິບັດຕາມຄວາມປະສົງຂອງພຣະເຈົ້າໃນທຸກສິ່ງ.
3. ຮັບເອົາການນຳພາຂອງພຣະເຈົ້າ, ດຳລົງຊີວິດໃນແສງສະຫວ່າງຂອງພຣະເຈົ້າ ແລະ ຮັບເອົາແສງສະຫວ່າງຈາກພຣະເຈົ້າ.
4. ໃຊ້ຊີວິດເທິງແຜ່ນດິນໂລກຕາມພາບລັກສະນະທີ່ພຣະເຈົ້າຮັກ; ຮັກພຣະເຈົ້າຢ່າງແທ້ຈິງແບບທີ່ເປໂຕຮັກ, ຖືກຄຶງກາງແຂນເພື່ອພຣະເຈົ້າ ແລະ ສົມຄວນຕາຍເພື່ອຕອບແທນຄວາມຮັກຂອງພຣະເຈົ້າ; ໄດ້ຮັບລັດສະໝີດຽວກັນກັບເປໂຕ.
5. ເປັນທີ່ຮັກ, ນັບຖື ແລະ ໜ້າຍົກຍ້ອງຂອງຜູ້ຄົນທັງໝົດທີ່ຢູ່ເທິງແຜ່ນດິນໂລກ.
6. ເອົາຊະນະໃນທຸກດ້ານຂອງການເປັນທາດຂອງຄວາມຕາຍ ແລະ ແດນມໍລະນາ, ບໍ່ເປີດໂອກາດໃຫ້ຊາຕານເຮັດວຽກງານຂອງມັນ, ຖືກພຣະເຈົ້າຄອບຄອງ, ອາໃສຢູ່ໃນວິນຍານທີ່ສົດຊື່ນ ແລະ ມີຊີວິດຊີວາ ແລະ ບໍ່ມີຄວາມອິດເມື່ອຍ.
7. ມີຄວາມຮູ້ສຶກທີ່ບໍ່ສາມາດບັນລະຍາຍໄດ້ກ່ຽວກັບຄວາມປິຕິຍິນດີ ແລະ ຄວາມຕື່ນເຕັ້ນຕະຫຼອດເວລາຕະຫຼອດຊີວິດ, ຄືກັບວ່າບຸກຄົນໃດໜຶ່ງໄດ້ເຫັນການມາເຖິງແຫ່ງວັນລັດສະໝີຂອງພຣະເຈົ້າ.
8. ໄດ້ຮັບໄຊຊະນະແຫ່ງລັດສະໝີຮ່ວມກັບພຣະເຈົ້າ ແລະ ມີສີໜ້າຄ້າຍຄືບັນດາໄພ່ພົນຜູ້ເປັນທີ່ຮັກຂອງພຣະເຈົ້າ.
9. ກາຍເປັນຜູ້ທີ່ພຣະເຈົ້າຮັກຢູ່ເທິງໂລກ, ນັ້ນກໍຄື ເປັນບຸດຊາຍສຸດທີ່ຮັກຂອງພຣະເຈົ້າ.

10. ປ່ຽນແປງຮູບລັກສະນະ ແລະ ຂຶ້ນໄປສະຫວັນຊັ້ນສາມຮ່ວມກັບພຣະເຈົ້າ ແລະ ເອົາຊະນະເນື້ອໜັງ.

ມີພຽງຜູ້ຄົນທີ່ສາມາດສືບທອດພຣະພອນຂອງພຣະເຈົ້າເທົ່ານັ້ນແມ່ນຜູ້ທີ່ພຣະເຈົ້າເຮັດໃຫ້ສົມບູນແບບ ແລະ ເຮັດໃຫ້ໄດ້ຮັບ. ປັດຈຸບັນນີ້ເຈົ້າໄດ້ຮັບຫຍັງແດ່ແລ້ວ? ພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບໄດ້ຮອດຈຸດໃດແລ້ວ? ພຣະເຈົ້າບໍ່ໄດ້ເຮັດໃຫ້ມະນຸດສົມບູນແບບໂດຍບັງເອີນ. ການເຮັດໃຫ້ມະນຸດສົມບູນແບບຂອງພຣະອົງແມ່ນມີເງື່ອນໄຂ ແລະ ມີຜົນໄດ້ຮັບທີ່ຊັດເຈນ ແລະ ສາມາດເບິ່ງເຫັນໄດ້. ມັນບໍ່ເປັນຢ່າງທີ່ມະນຸດຈິນຕະນາການ, ເມື່ອໃດທີ່ພວກເຂົາມີສັດທາໃນພຣະເຈົ້າ, ພວກເຂົາສາມາດຖືກພຣະເຈົ້າເຮັດໃຫ້ສົມບູນແບບ ແລະ ເຮັດໃຫ້ຖືກຮັບເອົາ ແລະ ສາມາດໄດ້ຮັບພຣະພອນ ແລະ ມໍລະດົກຂອງພຣະເຈົ້າຢູ່ໃນແຜ່ນດິນໂລກນີ້. ສິ່ງດັ່ງກ່າວແມ່ນມີຄວາມຫຍຸ້ງຍາກຫຼາຍ ແລະ ຍິ່ງຍາກໄປກວ່ານັ້ນແມ່ນການປ່ຽນແປງຮູບລັກສະນະຂອງຜູ້ຄົນ. ໃນປັດຈຸບັນ, ສິ່ງທີ່ພວກເຈົ້າຄວນສະແຫວງຫາໃນເບື້ອງຕົ້ນແມ່ນການຖືກພຣະເຈົ້າເຮັດໃຫ້ສົມບູນໃນທຸກສິ່ງທຸກຢ່າງ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນແບບຜ່ານທຸກຄົນ, ທຸກເລື່ອງ ແລະ ທຸກໆສິ່ງທີ່ເຈົ້າໄດ້ພະເຊີນ, ດັ່ງນັ້ນ ສິ່ງທີ່ພຣະເຈົ້າເປັນຈະຖືກນໍາມາສູ່ໃນຕົວພວກເຈົ້າຫຼາຍຂຶ້ນ. ກ່ອນອື່ນໝົດ ເຈົ້າຕ້ອງຮັບເອົາມໍລະດົກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກນີ້ກ່ອນ ແລ້ວເມື່ອນັ້ນເຈົ້າກໍຈະມີສິດສືບທອດພຣະພອນອັນຫຼວງຫຼາຍ ແລະ ຍິ່ງໃຫຍ່ຈາກພຣະເຈົ້າ. ທຸກສິ່ງເຫຼົ່ານີ້ແມ່ນສິ່ງທີ່ພວກເຈົ້າຄວນສະແຫວງຫາ ແລະ ຄືສິ່ງທີ່ພວກເຈົ້າຄວນເຂົ້າໃຈກ່ອນສິ່ງອື່ນໃດ. ຍິ່ງເຈົ້າສະແຫວງຫາເພື່ອໃຫ້ພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບເທົ່າໃດ, ເຈົ້າຍິ່ງຈະສາມາດເຫັນມືຂອງພຣະເຈົ້າໃນທຸກສິ່ງຫຼາຍຂຶ້ນເທົ່ານັ້ນ, ດັ່ງນັ້ນ ຜົນຕາມມາກໍຄືເຈົ້າຈະສະແຫວງຫາຄວາມເປັນຢູ່ຂອງພຣະທໍາຂອງພຣະເຈົ້າຢ່າງຂະຫຍັນຂັນແຂງ ແລະ ຄວາມເປັນຈິງຂອງພຣະທໍາຂອງພຣະອົງໂດຍຜ່ານມຸມມອງທີ່ແຕກຕ່າງກັນ ແລະ ໃນເລື່ອງທີ່ແຕກຕ່າງກັນ. ເຈົ້າບໍ່ສາມາດເປັນທີ່ພໍໃຈກັບສະຖານະທີ່ຢູ່ຊື່ໆເຊັ່ນນີ້ ເພື່ອພຽງແຕ່ບໍ່ໄດ້ເຮັດບາບ ຫຼື ບໍ່ມີແນວຄວາມຄິດໃດໆ, ບໍ່ມີປັດຊະຍາສໍາລັບການດໍາລົງຊີວິດ ແລະ ບໍ່ມີຄວາມປາຖະໜາຂອງມະນຸດ. ພຣະເຈົ້າເຮັດໃຫ້ມະນຸດສົມບູນແບບໃນຫຼາກຫຼາຍວິທີ, ໃນທຸກກໍລະນີແມ່ນຈະມີໂອກາດໄດ້ຖືກເຮັດໃຫ້ສົມບູນແບບ ແລະ ພຣະອົງສາມາດເຮັດໃຫ້ເຈົ້າສົມບູນແບບໄດ້ ບໍ່ພຽງແຕ່ໃນດ້ານບວກເທົ່ານັ້ນ ແຕ່ໃນດ້ານລົບອີກດ້ວຍ ເພື່ອເຮັດໃຫ້ສິ່ງທີ່ເຈົ້າໄດ້ຮັບຫຼາຍຂຶ້ນກວ່າເກົ່າ. ທຸກໆມື້ແມ່ນມີໂອກາດທີ່ຈະຖືກເຮັດໃຫ້ສົມບູນ ແລະ ໂອກາດທີ່ຈະຖືກພຣະເຈົ້າຮັບເອົາ. ຫຼັງຈາກມີປະສົບການເຊັ່ນນີ້ໄລຍະໜຶ່ງແລ້ວ, ເຈົ້າຈະຖືກປ່ຽນແປງຢ່າງໃຫຍ່ຫຼວງ ແລະ ເຈົ້າຈະໄດ້ຮັບຄວາມເຂົ້າໃຈໃນຫຼາຍສິ່ງຫຼາຍຢ່າງໂດຍທໍາມະຊາດ ເຊິ່ງເຈົ້າບໍ່ມີຄວາມຮູ້ມາກ່ອນເລີຍ. ມັນບໍ່ຈໍາເປັນຕ້ອງມີການແນະນໍາຈາກຄົນອື່ນ; ໂດຍທີ່ເຈົ້າບໍ່ຮູ້ຕົວ, ພຣະເຈົ້າຈະໃຫ້ຄວາມສະຫວ່າງແກ່ເຈົ້າ ເພື່ອເຈົ້າຈະໄດ້ຢັ່ງຮູ້ໃນທຸກໆສິ່ງ ແລະ ເຂົ້າສູ່ປະສົບການທັງໝົດຂອງເຈົ້າຢ່າງລະອຽດ. ພຣະເຈົ້າຈະນໍາທາງເຈົ້າຢ່າງແນ່ນອນເພື່ອເຈົ້າຈະບໍ່ໄດ້ຫັນໄປທາງຊ້າຍ ຫຼື ຂວາ ແລະ ໃນທີ່ສຸດເຈົ້າຈະຖືກຍ່າງຢູ່ເທິງເສັ້ນທາງສູ່ຄວາມສົມບູນແບບຂອງພຣະອົງ.

ການຖືກພຣະເຈົ້າເຮັດໃຫ້ສົມບູນແບບບໍ່ສາມາດຈໍາກັດພຽງການສົມບູນແບບໂດຍການກິນ ແລະ

ດື່ມພຣະທຳຂອງພຣະເຈົ້າ. ປະສົບການດັ່ງກ່າວແມ່ນເປັນປະສົບການດ້ານດຽວຫຼາຍເກີນໄປ, ມັນຈະຄັບແຄບເກີນໄປ ແລະ ພຽງແຕ່ຈະຈຳກັດມະນຸດໃຫ້ຢູ່ໃນຂອບເຂດເລັກນ້ອຍເທົ່ານັ້ນ. ໃນກໍລະນີນີ້, ມະນຸດຈະຂາດການບຳລຸງທາງຈິດວິນຍານຢ່າງຫຼວງຫຼາຍທີ່ພວກເຂົາຕ້ອງການ. ຖ້າເຈົ້າປາຖະໜາໃຫ້ພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບ, ເຈົ້າຕ້ອງຮຽນຮູ້ທີ່ຈະຜະເຊີນກັບທຸກໆເລື່ອງ ແລະ ສາມາດໄດ້ຮັບແສງສະຫວ່າງໃນທຸກສິ່ງທີ່ເກີດຂຶ້ນກັບເຈົ້າ. ບໍ່ວ່າດີ ຫຼື ບໍ່ດີ ເຈົ້າກໍ່ຄວນໄດ້ຮັບຜົນປະໂຫຍດຈາກມັນ ແລະ ມັນບໍ່ຄວນເຮັດໃຫ້ເຈົ້າກາຍເປັນຄົນຄິດລົບ. ບໍ່ວ່າເລື່ອງໃດກໍຕາມ, ເຈົ້າຄວນພິຈາລະນາສິ່ງຕ່າງໆໃນຂະນະທີ່ຢືນຢູ່ຂ້າງພຣະເຈົ້າ ແລະ ບໍ່ວິເຄາະ ຫຼື ຮຽນຮູ້ມັນຕາມມຸມມອງຂອງມະນຸດ (ນີ້ຈະເປັນການຫັນປ່ຽນໃນປະສົບການຂອງເຈົ້າ). ຖ້າເຈົ້າມີປະສົບການເຊັ່ນນີ້ ແລ້ວຫົວໃຈຂອງເຈົ້າກໍຈະເຕັມໄປດ້ວຍພາລະໃນຊີວິດຂອງເຈົ້າ; ເຈົ້າຈະມີຊີວິດຢູ່ພາຍໃຕ້ແສງສະຫວ່າງແຫ່ງລັດສະໝີຂອງພຣະເຈົ້າຕະຫຼອດເວລາ ແລະ ຈະບໍ່ຫັນປ່ຽນຈາກການປະຕິບັດຂອງເຈົ້າໄດ້ຢ່າງງ່າຍດາຍ. ຄົນປະເພດນີ້ມີອະນາຄົດທີ່ສົດໃສ. ມີໂອກາດຫຼາຍທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບ. ທຸກຢ່າງຂຶ້ນຢູ່ກັບວ່າພວກເຈົ້າແມ່ນຜູ້ທີ່ຮັກພຣະເຈົ້າຢ່າງແທ້ຈິງ ຫຼື ບໍ່ ແລະ ເຈົ້າມີຄວາມເດັດດ່ຽວທີ່ຈະໃຫ້ພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບ ຫຼື ບໍ່, ຖືກຮັບໂດຍພຣະເຈົ້າ ແລະ ໄດ້ຮັບພຣະພອນ ແລະ ມໍລະດົກຂອງພຣະອົງຫຼື ບໍ. ພຽງແຕ່ມີຄວາມເດັດດ່ຽວເທົ່ານັ້ນແມ່ນບໍ່ພຽງພໍ, ພວກເຈົ້າຕ້ອງມີຄວາມຮູ້ຢ່າງຫຼວງຫຼາຍ, ບໍ່ດັ່ງນັ້ນ ພວກເຈົ້າກໍຈະຫັນປ່ຽນໃນການປະຕິບັດຂອງພວກເຈົ້າຢູ່ຕະຫລອດ. ພຣະເຈົ້າເຕັມໃຈທີ່ຈະເຮັດໃຫ້ພວກເຈົ້າທຸກຄົນສົມບູນແບບ. ເຖິງວ່າ ໃນຕອນນີ້, ຫຼາຍຄົນໄດ້ຍອມຮັບເອົາພາລະກິດຂອງພຣະເຈົ້າມາເປັນເວລາດົນນານແລ້ວກໍ່ຕາມ, ພວກເຂົາໄດ້ຈຳກັດໂຕເອງພຽງເພື່ອຊື່ນຊົມໃນພຣະຄຸນຂອງພຣະເຈົ້າ ແລະ ພຽງແຕ່ເຕັມໃຈຍອມໃຫ້ພຣະເຈົ້າມອບຄວາມສະບາຍທາງເນື້ອໜັງໃຫ້ກັບພວກເຂົາເທົ່ານັ້ນ. ແຕ່ບໍ່ປາຖະໜາທີ່ຈະໄດ້ຮັບການເປີດເຜີຍຫຼາຍຂຶ້ນ ຫຼື ສູງຂຶ້ນ, ນີ້ສະແດງໃຫ້ເຫັນວ່າຫົວໃຈຂອງມະນຸດຍັງຄົງຢູ່ຂ້າງນອກຢູ່ສະເໝີ. ເຖິງແມ່ນວ່າພາລະກິດຂອງມະນຸດ, ການຮັບໃຊ້ຂອງເຂົາ ແລະ ຫົວໃຈແຫ່ງຄວາມຮັກທີ່ເຂົາມີຕໍ່ພຣະເຈົ້ານັ້ນມີຄວາມບໍ່ບໍລິສຸດພຽງເລັກນ້ອຍກໍຕາມ, ຕາບໃດທີ່ແກ່ນແທ້ພາຍໃນມະນຸດ ແລະ ສະເພາະຄວາມຄິດຫຼ້າຫຼັງຂອງເຂົາແລ້ວ, ມະນຸດຍັງສະແຫວງຫາຄວາມສະຫງົບສຸກ ແລະ ຄວາມຊື່ນຊົມຍິນດີຂອງເນື້ອໜັງຢູ່ຕະຫຼອດເວລາ ແລະ ບໍ່ໃສ່ໃຈຫຍັງເລີຍວ່າເງື່ອນໄຂ ແລະ ວັດຖຸປະສົງຂອງການຖືກພຣະເຈົ້າເຮັດໃຫ້ສົມບູນນັ້ນອາດມີຫຍັງແດ່. ດັ່ງນັ້ນ ຊີວິດຂອງຄົນສ່ວນໃຫຍ່ແມ່ນຍັງຫຍາບຊ້າ ແລະ ເສື່ອມໂຊມ. ຊີວິດຂອງພວກເຂົາບໍ່ມີການປ່ຽນແປງແມ່ນແຕ່ໜ້ອຍດຽວ. ພວກເຂົາບໍ່ຄຳນຶງເຖິງຄວາມສັດທາໃນພຣະເຈົ້າວ່າເປັນເລື່ອງສຳຄັນເລີຍ, ມັນເປັນຄືກັບວ່າພວກເຂົາພຽງມີຄວາມສັດທາເພື່ອປະໂຫຍດຂອງຄົນອື່ນ ໂດຍບໍ່ມີຄວາມໃສ່ໃຈ ແລະ ເຮັດໄປແບບບໍ່ສົນໃຈ ດຳລົງຢູ່ຢ່າງບໍ່ມີຈຸດໝາຍ. ມີພຽງໜ້ອຍຄົນທີ່ສາມາດສະແຫວງຫາເພື່ອເຂົ້າສູ່ພຣະທຳຂອງພຣະເຈົ້າໃນທຸກສິ່ງ, ໄດ້ຮັບສິ່ງຕ່າງໆຢ່າງອຸດົມສົມບູນ, ກາຍເປັນຜູ້ທີ່ມີຄວາມ ຮັ່ງມີຫຼາຍຂຶ້ນຢູ່ໃນເຮືອນຂອງພຣະເຈົ້າໃນປັດຈຸບັນ ແລະ ໄດ້ຮັບພຣະພອນຂອງພຣະເຈົ້າຫຼາຍຂຶ້ນ. ຖ້າເຈົ້າສະແຫວງຫາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບໃນທຸກສິ່ງ ແລະ

ສາມາດຮັບເອົາສິ່ງທີ່ພຣະເຈົ້າໃຫ້ຄຳໝັ້ນສັນຍາຢູ່ໃນໂລກນີ້; ຖ້າເຈົ້າສະແຫວງຫາໃຫ້ພຣະເຈົ້າເປີດແສງສະຫວ່າງໃຫ້ເຈົ້າໃນທຸກສິ່ງ ແລະ ບໍ່ປ່ອຍໃຫ້ການເວລາຜ່ານພົ້ນໄປລ້າໆ, ນີ້ແມ່ນເສັ້ນທາງທີ່ເໝາະສົມທີ່ຈະເຂົ້າສູ່ຢ່າງຈິງຈັງ. ມີພຽງເຊັ່ນນີ້ເທົ່ານັ້ນທີ່ເຈົ້າຈະສົມຄວນ ແລະ ມີສິດຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້. ເຈົ້າແມ່ນຜູ້ທີ່ສະແຫວງຫາໃຫ້ພຣະເຈົ້າເຮັດໃຫ້ສົມບູນແບບແທ້ບໍ? ເຈົ້າແມ່ນຄົນທີ່ຈິງຈັງກັບທຸກສິ່ງແທ້ບໍ? ເຈົ້າມີຈິດວິນຍານແຫ່ງຄວາມຮັກຕໍ່ພຣະເຈົ້າແບບດຽວກັບທີ່ເປໂຕມີບໍ? ເຈົ້າມີຄວາມຕັ້ງໃຈທີ່ຈະຮັກພຣະເຈົ້າແບບພຣະເຢຊູຮັກບໍ? ເຈົ້າໄດ້ມີຄວາມເຊື່ອໃນພຣະເຢຊູມາເປັນເວລາຫຼາຍປີ; ເຈົ້າໄດ້ເຫັນບໍວ່າພຣະເຢຊູຮັກພຣະເຈົ້າແນວໃດ? ພຣະເຢຊູແມ່ນຜູ້ທີ່ເຈົ້າເຊື່ອແທ້ບໍ? ເຈົ້າເຊື່ອໃນພຣະເຈົ້າທີ່ແທ້ຈິງຂອງມື້ນີ້ບໍ; ເຈົ້າເຫັນບໍວ່າພຣະເຈົ້າທີ່ແທ້ຈິງທີ່ເປັນມະນຸດຮັກພຣະເຈົ້າທີ່ຢູ່ເທິງສະຫວັນແນວໃດ? ເຈົ້າມີຄວາມເຊື່ອໃນພຣະຜູ້ເປັນເຈົ້າ ພຣະເຢຊູຄຣິດ; ນັ້ນກໍ່ຍ້ອນການຖືກຄຶງກາງແຂນຂອງພຣະເຢຊູເພື່ອໄຖ່ບາບມະນຸດຊາດ ແລະ ສິ່ງອັດສະຈັນຕ່າງໆທີ່ພຣະອົງໄດ້ເຮັດນັ້ນເປັນຄວາມຈິງທີ່ຍອມຮັບກັນໂດຍທົ່ວໄປ. ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມເຊື່ອຂອງມະນຸດບໍ່ໄດ້ມາຈາກຄວາມຮູ້ ແລະ ຄວາມເຂົ້າໃຈທີ່ແທ້ຈິງກ່ຽວກັບພຣະເຢຊູຄຣິດ. ເຈົ້າເຊື່ອພຽງໃນນາມຂອງພຣະເຢຊູເທົ່ານັ້ນ ແຕ່ເຈົ້າບໍ່ເຊື່ອໃນພຣະວິນຍານຂອງພຣະອົງ, ເພາະວ່າເຈົ້າບໍ່ໄດ້ໃສ່ໃຈວ່າພຣະເຢຊູໄດ້ຮັກພຣະເຈົ້າແນວໃດ. ຄວາມເຊື່ອຂອງເຈົ້າໃນພຣະເຈົ້າແມ່ນໄຮ້ດຽງສາເກີນໄປ. ເຖິງແມ່ນວ່າເຈົ້າໄດ້ມີຄວາມເຊື່ອໃນພຣະເຢຊູມາເປັນເວລາຫຼາຍປີແລ້ວກໍ່ຕາມ, ແຕ່ເຈົ້າບໍ່ຮູ້ວ່າຈະຮັກພຣະເຈົ້າແນວໃດ. ນີ້ຈະບໍ່ເຮັດໃຫ້ເຈົ້າເປັນຄົນທີ່ໂງ່ຈ້າທີ່ສຸດໃນໂລກບໍ? ສິ່ງນີ້ພິສູດໃຫ້ເຫັນວ່າຫຼາຍໆປີທີ່ເຈົ້າໄດ້ກິນອາຫານຂອງພຣະຜູ້ເປັນເຈົ້າພຣະເຢຊູຄຣິດຢ່າງໄຮ້ຄ່າ. ບໍ່ພຽງແຕ່ເຮົາບໍ່ມັກຄົນປະເພດນີ້, ເຮົາເຊື່ອວ່າພຣະຜູ້ເປັນເຈົ້າພຣະເຢຊູຄຣິດ ຜູ້ເຈົ້ານະມັດສະການກໍ່ຈະບໍ່ມັກພວກເຂົາເຊັ່ນດຽວກັນ. ຄົນເຊັ່ນນີ້ຈະຖືກເຮັດໃຫ້ສົມບູນແບບໄດ້ແນວໃດ? ເຈົ້າບໍ່ໜ້າແດງໄປດ້ວຍຄວາມລະອາຍບໍ? ເຈົ້າບໍ່ຮູ້ສຶກລະອາຍໃຈແດ່ບໍ? ເຈົ້າຍັງມີໜ້າທີ່ຈະພົບພຣະເຢຊູຄຣິດຂອງເຈົ້າບໍ? ພວກເຈົ້າທັງໝົດເຂົ້າໃຈໃນສິ່ງທີ່ເຮົາເວົ້າບໍ?

# ຄົນຊົ່ວຈະຖືກລົງໂທດຢ່າງແນ່ນອນ

ຈົ່ງເບິ່ງໃນຕົວພວກເຈົ້າວ່າເຫັນຄວາມຊອບທຳໃນທຸກສິ່ງທີ່ເຈົ້າກະທຳ ຫຼື ບໍ່ ແລະ ພຣະເຈົ້າໄດ້ເຝົ້າເບິ່ງການກະທຳທັງໝົດຂອງເຈົ້າ ຫຼື ບໍ່: ນີ້ ແມ່ນຫຼັກການຂອງຄົນທີ່ເຊື່ອໃນພຣະເຈົ້າປະຕິບັດພາລະກິດຂອງພວກເຂົາ. ພວກເຈົ້າຈະຖືກເອີ້ນວ່າເປັນຄົນທ່ຽງທຳ ຍ້ອນວ່າພວກເຈົ້າສາມາດເຮັດໃຫ້ພຣະເຈົ້າເພິ່ງພໍໃຈ ແລະ ຍ້ອນວ່າພວກເຈົ້າໄດ້ຍອມຮັບເອົາການເບິ່ງແຍງດູແລ ແລະ ການປົກປ້ອງຈາກພຣະເຈົ້າ. ໃນສາຍຕາຂອງພຣະເຈົ້າ, ທຸກຄົນທີ່ຍອມຮັບເອົາການເບິ່ງແຍງດູແລ, ການປົກປ້ອງ ແລະ ຄວາມສົມບູນແບບຂອງພຣະເຈົ້າ ແລະ ຜູ້ທີ່ພຣະອົງຊົງເລືອກແມ່ນຄົນມີສິນທຳ ແລະ ພຣະອົງຖືວ່າພວກເຂົາທັງໝົດມີຄຸນຄ່າ. ຍິ່ງເຈົ້າຍອມຮັບພຣະທຳຂອງພຣະເຈົ້າໃນປັດຈຸບັນຫຼາຍເທົ່າໃດ, ເຈົ້າກໍຍິ່ງຈະສາມາດໄດ້ຮັບ ແລະ ເຂົ້າໃຈຄວາມປາຖະໜາຂອງພຣະເຈົ້າຫຼາຍເທົ່ານັ້ນ ແລະ ດ້ວຍເຫດນີ້ ເຈົ້າກໍຈະຍິ່ງສາມາດດຳລົງຊີວິດດ້ວຍພຣະທຳຂອງພຣະເຈົ້າ ແລະ ຕອບສະໜອງຄວາມຕ້ອງການຂອງພຣະອົງ. ນີ້ຄືພາລະກິດຂອງພຣະເຈົ້າ ທີ່ໄດ້ມອບໝາຍໃຫ້ພວກເຈົ້າ ແລະ ມັນແມ່ນສິ່ງທີ່ພວກເຈົ້າທຸກຄົນຄວນເຮັດໃຫ້ສຳເລັດ. ຖ້າເຈົ້າໃຊ້ແນວຄວາມຄິດຕົວເອງວັດແທກ ແລະ ຈຳກັດພຣະເຈົ້າ ຄືດັ່ງພຣະເຈົ້າເປັນຮູບປັ້ນດິນໜຽວທີ່ບໍ່ມີການປ່ຽນແປງ ແລະ ຖ້າເຈົ້າພຽງແຕ່ຈຳກັດພຣະເຈົ້າຢູ່ພາຍໃນຂອບເຂດພຣະຄຳພີ ແລະ ຈຳກັດພຣະອົງພາຍໃນຂອບເຂດວຽກງານທີ່ຈຳກັດ, ແລ້ວນີ້ກໍພິສູດວ່າພວກເຈົ້າໄດ້ປະນາມພຣະເຈົ້າ. ຍ້ອນວ່າຄົນຢິວຂອງຍຸກແຫ່ງພັນທະສັນຍາເດີມນັ້ນ ເຫັນພຣະເຈົ້າເປັນຮູບປັ້ນບູຊາທີ່ເປັນຮູບຮ່າງຕາຍຕົວທີ່ພວກເຂົາຍຶດຖືໃນຫົວໃຈຂອງພວກເຂົາ ຄືດັ່ງວ່າພຣະເຈົ້າສາມາດເປັນພຽງພຣະເມຊີອາເທົ່ານັ້ນ ແລະ ມີແຕ່ພຣະອົງເທົ່ານັ້ນທີ່ຖືກເອີ້ນວ່າພຣະເມຊີອາທີ່ສາມາດເປັນພຣະເຈົ້າ ແລະ ຍ້ອນວ່າມະນຸດຮັບໃຊ້ ແລະ ບູຊາພຣະເຈົ້າຄ້າຍກັບວ່າພຣະອົງແມ່ນຮູບປັ້ນດິນໜຽວ (ທີ່ບໍ່ມີຊີວິດ). ພວກເຂົາຈຶ່ງຕອກພຣະເຢຊູຂອງຍຸກນັ້ນໃສ່ໄມ້ກາງແຂນ ແລະ ຕັດສິນພຣະອົງໃຫ້ໄປສູ່ຄວາມຕາຍ ໃນທີ່ສຸດພຣະເຢຊູທີ່ບໍ່ມີຄວາມຜິດຫຍັງກໍຖືກປະນາມຈົນເຖິງແກ່ຄວາມຕາຍ. ພຣະເຈົ້າບໍ່ມີຄວາມຜິດໃດໆ ແຕ່ມະນຸດກໍຍັງບໍ່ໄດ້ລະເວັ້ນພຣະອົງ ແລະ ຢືນຢັນຕັດສິນພຣະອົງໄປສູ່ຄວາມຕາຍ. ດ້ວຍເຫດນີ້, ພຣະເຢຊູຈຶ່ງຖືກຄຶງໄວ້ທີ່ໄມ້ກາງແຂນ. ມະນຸດມີຄວາມເຊື່ອມາຕະຫຼອດວ່າ ພຣະເຈົ້າບໍ່ມີການປ່ຽນແປງ ແລະ ນິຍາມພຣະອົງອີງຕາມໜັງສືເຫຼັ້ມດຽວ ນັ້ນກໍຄື ພຣະຄຳພີ ຄືດັ່ງວ່າມະນຸດມີຄວາມເຂົ້າໃຈຢ່າງສົມບູນກ່ຽວກັບການຄຸ້ມຄອງຂອງພຣະເຈົ້າ, ຄືກັບວ່າມະນຸດຖືທຸກສິ່ງທີ່ພຣະເຈົ້າກະທຳຢູ່ໃນກຳມືຂອງເຂົາ. ມະນຸດແມ່ນໄຮ້ສາລະທີ່ສຸດ, ອວດດີທີ່ສຸດ ແລະ ພວກເຂົາທຸກຄົນມີພອນສະຫວັນດ້ານຄຸຍໂມ້ທີ່ສຸດ. ບໍ່ວ່າຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າຈະມີຫຼາຍພຽງໃດ ແຕ່ເຮົາຂໍເວົ້າວ່າເຈົ້າບໍ່ຮູ້ຈັກພຣະເຈົ້າເລີຍ, ເຈົ້າຄືຄົນທີ່ຕໍ່ຕ້ານພຣະເຈົ້າທີ່ສຸດ ແລະ ເຈົ້າໄດ້ປະນາມພຣະເຈົ້າ ເພາະວ່າເຈົ້າບໍ່ມີຄວາມສາມາດໃດໆ ທີ່ຈະເຊື່ອຟັງໃນພາລະກິດຂອງພຣະເຈົ້າ ແລະ ທີ່ຈະເດີນຕາມເສັ້ນທາງທີ່ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ເປັນຫຍັງພຣະເຈົ້າຈຶ່ງບໍ່ເຄີຍເພິ່ງພໍໃຈກັບການກະທຳຂອງມະນຸດ? ຍ້ອນວ່າມະນຸດບໍ່ຮູ້ຈັກພຣະເຈົ້າ, ຍ້ອນວ່າມະນຸດມີແນວຄວາມຄິດຫຼາຍເກີນໄປ ແລະ ຍ້ອນວ່າຄວາມ

ຮູ້ຂອງມະນຸດກ່ຽວກັບພຣະເຈົ້າແມ່ນບໍ່ກົງກັບຄວາມເປັນຈິງ ແຕ່ກົງກັນຂ້າມ ເປັນທຳນອງດຽວກັນຊໍ້າແລ້ວຊໍ້າເລົ່າຢ່າງໜ້າເບື່ອໜ່າຍໂດຍບໍ່ມີການປ່ຽນແປງຫຍັງ ແລະ ນຳໃຊ້ວິທີການແບບເກົ່າໃນທຸກສະຖານະການ. ສະນັ້ນ, ຫຼັງຈາກໄດ້ສະເດັດລົງມາແຜ່ນດິນໂລກໃນປັດຈຸບັນ, ພຣະເຈົ້າກໍຍັງຖືກຕອກໃສ່ໄມ້ກາງແຂນອີກຄັ້ງໂດຍມະນຸດ. ມວນມະນຸດຈັ່ງແມ່ນໂຫດຮ້າຍອຳມະຫິດ! ການຮ່ວມມືກັນຢ່າງລັບໆ ແລະ ການມີກົນອຸບາຍ, ການຈ່ອງດຶງກັນ, ການຈັບກຸມກັນແລະກັນ, ການຍາດແຍ່ງຊື່ສຽງ ແລະໂຊກລາບ, ການຂ້າຟັນກັນເອງ ມື້ໃດມັນຈະໝົດສິ້ນໄປ? ເຖິງແມ່ນວ່າ ພຣະເຈົ້າໄດ້ເວົ້າອອກມາເປັນຮ້ອຍພັນຄຳ ແຕ່ກໍບໍ່ມີໃຜມີສະຕິ. ຜູ້ຄົນເຮັດເພື່ອປະໂຫຍດຂອງຄອບຄົວຂອງພວກເຂົາ, ລູກຊາຍ-ລູກສາວ, ເພື່ອອາຊີບວຽກງານ, ໂອກາດໃນອະນາຄົດ, ຕຳແໜ່ງ, ຄວາມທະນົງຕົວ ແລະ ເງິນຄຳຂອງພວກເຂົາ; ເພື່ອອາຫານ, ເພື່ອເຄື່ອງນຸ່ງຫົ່ມ ແລະ ຮ່າງກາຍ. ແຕ່ມີການກະທຳຂອງຜູ້ໃດທີ່ເຮັດເພື່ອປະໂຫຍດຂອງພຣະເຈົ້າຢ່າງແທ້ຈິງແດ່? ແມ່ນແຕ່ໃນຈຳນວນຄົນທີ່ກະທຳເພື່ອປະໂຫຍດຂອງພຣະເຈົ້າກໍຍັງມີຄົນຈຳນວນໜ້ອຍທີ່ຮູ້ຈັກພຣະເຈົ້າ. ມີຈັກຄົນທີ່ບໍ່ກະທຳເພື່ອຕົວເອງ? ມີຈັກຄົນທີ່ບໍ່ກົດຂີ່ ຫຼື ປະນາມຄົນອື່ນເພື່ອຮັກສາຕຳແໜ່ງຂອງພວກເຂົາເອງ? ດ້ວຍເຫດນີ້, ພຣະເຈົ້າຈຶ່ງຖືກບັງຄັບຕັດສິນຈົນຕາຍຫຼາຍຄັ້ງ ແລະ ເປັນການຕັດສິນປະນາມພຣະເຈົ້າຢ່າງປ່າເຖື່ອນທີ່ນັບບໍ່ຖ້ວນ ແລະ ເຮັດໃຫ້ພຣະອົງຖືກຕອກໃສ່ໄມ້ກາງແຂນອີກຄັ້ງ. ມີຈັກຄົນທີ່ສາມາດເອີ້ນໄດ້ວ່າເປັນຄົນຊອບທຳ ຍ້ອນວ່າພວກເຂົາກະທຳ ເພື່ອປະໂຫຍດຂອງພຣະເຈົ້າຢ່າງແທ້ຈິງ?

ມັນງ່າຍຫຼາຍບໍທີ່ຈະເຮັດໃຫ້ເປັນຄົນ ສົມບູນແບບຕໍ່ໜ້າພຣະເຈົ້າດັ່ງໄພ່ພົນ ຫຼື ຄົນຊອບທຳ? ມັນແມ່ນຂໍ້ຄວາມຈິງທີ່ວ່າ “ບໍ່ມີຄົນຊອບທຳໃນໂລກນີ້ ຄົນຊອບທຳແມ່ນບໍ່ໄດ້ຢູ່ໃນໂລກນີ້”. ເວລາພວກເຈົ້າມາຢູ່ຕໍ່ໜ້າພຣະເຈົ້າ ຈົ່ງພິຈາລະນາສິ່ງທີ່ພວກເຈົ້ານຸ່ງຫົ່ມ, ພິຈາລະນາທຸກຄຳເວົ້າ ແລະການກະທຳຂອງພວກເຈົ້າ; ທຸກຄວາມນຶກຄິດ ແລະ ຄວາມຄິດເຫັນຂອງພວກເຈົ້າ ແລະ ແມ່ນແຕ່ຄວາມຝັນທີ່ພວກເຈົ້າຝັນເຫັນທຸກມື້. ສິ່ງເຫຼົ່ານີ້ແມ່ນເພື່ອປະໂຫຍດຂອງພວກເຈົ້າ. ນີ້ບໍ່ແມ່ນສະພາບການທີ່ແທ້ຈິງບໍ? “ຄວາມທ່ຽງທຳ” ບໍ່ໄດ້ໝາຍເຖິງການໃຫ້ທານຄົນອື່ນ, ມັນບໍ່ໄດ້ໝາຍເຖິງການຮັກເພື່ອນບ້ານຄືດັ່ງຮັກຕົວເຈົ້າເອງ ແລະ ມັນບໍ່ໄດ້ໝາຍເຖິງການລະເວັ້ນຈາກການຕໍ່ສູ້ ແລະການຖົກຖຽງ ຫຼື ການປຸ້ນຈີ້ ແລະ ການລັກຂະໂມຍ. ຄວາມຊອບທຳໝາຍເຖິງການຮັບເອົາວຽກງານຂອງພຣະເຈົ້າມາເປັນໜ້າທີ່ຂອງເຈົ້າ ແລະ ການເຊື່ອໃນສິ່ງທີ່ພຣະເຈົ້າປັ້ນແຕ່ງ ແລະ ລິຂິດໄວ້ ຄືກັບວ່າເປັນພາລະໜ້າທີ່ຂອງເຈົ້າທີ່ສະຫວັນສົ່ງມາໃຫ້ ໂດຍບໍ່ຄຳນຶງເຖິງເວລາ ຫຼື ສະຖານທີ່ ຄືກັບທຸກຢ່າງທີ່ພຣະເຢຊູໄດ້ກະທຳຜ່ານມາ. ນີ້ຄືຄວາມຊອບທຳທີ່ແທ້ຈິງທີ່ພຣະເຈົ້າກ່າວເຖິງ. ການທີ່ສາມາດເອີ້ນໂລດວ່າ ເປັນຄົນທີ່ມີ ຄວາມຊອບທຳ ກໍຍ້ອນວ່າລາວໄດ້ຊ່ວຍຊີວິດເທວະດາສອງຕົນທີ່ພຣະເຈົ້າໄດ້ສົ່ງມາ ໂດຍບໍ່ໄດ້ສົນໃຈວ່າລາວຈະໄດ້ຮັບ ຫຼື ເສຍຫຍັງ. ສາມາດເວົ້າໄດ້ວ່າສິ່ງທີ່ລາວກະທຳໃນເວລານັ້ນອາດເອີ້ນໄດ້ວ່າຄວາມຊອບທຳເທົ່ານັ້ນ, ແຕ່ບໍ່ສາມາດເອີ້ນລາວວ່າເປັນຄົນທີ່ມີຄວາມຊອບທຳໄດ້. ນີ້ກໍຍ້ອນວ່າໂລດໄດ້ເຫັນພຣະເຈົ້າ ຈົນລາວໄດ້ມອບລູກສາວຂອງລາວສອງຄົນ ເພື່ອເປັນການແລກປ່ຽນກັບເທວະດາສອງຕົນ. ແຕ່ພຶດຕິກຳຂອງລາວທັງໝົດໃນອະດີດບໍ່ໄດ້ໝາຍເຖິງຄວາມຊອບທຳ ແລະ

ດ້ວຍເຫດນີ້ ເຮົາຈຶ່ງຂໍເວົ້າວ່າ "ບໍ່ມີຄວາມຊອບທຳຢູ່ໃນແຜ່ນດິນໂລກນີ້". ແມ່ນແຕ່ຢູ່ໃນທ່າມກາງຜູ້ຄົນທີ່ຢູ່ໃນສາຍນໍ້າແຫ່ງການຟື້ນຟູ ກໍຍັງບໍ່ສາມາດເອີ້ນຜູ້ໃດໄດ້ວ່າມີຄວາມຊອບທຳ. ເຖິງການກະທຳຂອງເຈົ້າຈະດີປານໃດກໍຕາມ, ເຖິງຈະປາກົດວ່າ ເຈົ້າສັນລະເສີນພຣະນາມຂອງພຣະເຈົ້າ, ບໍ່ໄດ້ຕົບຕີ ແລະ ສາບແຊ່ງຄົນອື່ນ ຫຼື ປຸ້ນຈີ້ ແລະ ປຸ້ນສະດົມຈາກຄົນອື່ນ ແຕ່ເຈົ້າກໍຍັງບໍ່ສາມາດເອີ້ນໄດ້ວ່າເປັນຄົນຊອບທຳ ເນື່ອງຈາກວ່າສິ່ງເຫຼົ່ານີ້ຄົນທຳມະດາກໍສາມາດມີໄດ້ຄືກັນ. ສິ່ງສຳຄັນໃນປັດຈຸບັນນີ້ກໍຄືການທີ່ເຈົ້າບໍ່ຮູ້ຈັກພຣະເຈົ້າ. ມັນສາມາດເວົ້າໄດ້ວ່າ ໃນປັດຈຸບັນ ເຈົ້າມີຄວາມເປັນມະນຸດປົກກະຕິພຽງໜ້ອຍດຽວເທົ່ານັ້ນ ແຕ່ບໍ່ມີອົງປະກອບຂອງຄວາມຊອບທຳທີ່ພຣະເຈົ້າໄດ້ກ່າວເຖິງ ແລະ ດ້ວຍເຫດນີ້ສິ່ງທີ່ເຈົ້າກະທຳຈຶ່ງບໍ່ສາມາດພິສູດວ່າເຈົ້າຮູ້ຈັກພຣະເຈົ້າ.

ໃນເມື່ອກ່ອນ, ເວລາທີ່ພຣະເຈົ້າຍັງຊົງປະທັບຢູ່ເທິງສະຫວັນນັ້ນ ມະນຸດໄດ້ປະພຶດໃນທາງທີ່ຫຼອກລວງຕໍ່ພຣະເຈົ້າ. ປັດຈຸບັນ ພຣະເຈົ້າແມ່ນຢູ່ໃນທ່າມກາງມະນຸດ. ບໍ່ມີໃຜຮູ້ວ່າດົນປານໃດແລ້ວ. ແຕ່ເຖິງຢ່າງນັ້ນກໍຕາມ ໃນການກະທຳສິ່ງຕ່າງໆມະນຸດຍັງທຳທ່າເຮັດ ແລະ ພະຍາຍາມຫຼອກລວງພຣະອົງຢູ່. ຄວາມຄິດຂອງມະນຸດບໍ່ແມ່ນຫຼ້າຫຼັງເກີນໄປບໍ? ມັນຄືກັນກັບຄົນຢູດາ; ກ່ອນທີ່ພຣະເຢຊູຈະສະເດັດລົງມາ, ຄົນຢູດາຈະເວົ້າຕົວະເພື່ອຫຼອກລວງອ້າຍເອື້ອຍນ້ອງຂອງພວກເຂົາ ແລະ ເຖິງແມ່ນວ່າພາຍຫຼັງທີ່ພຣະເຢຊູໄດ້ສະເດັດລົງມາ ແລ້ວ ພວກເຂົາກໍຍັງບໍ່ໄດ້ມີການປ່ຽນແປງ; ພວກເຂົາບໍ່ຮູ້ຈັກພຣະເຢຊູແມ່ນແຕ່ໜ້ອຍດຽວ ແລະ ໃນທີ່ສຸດພວກເຂົາກໍໄດ້ທໍລະຍົດຕໍ່ພຣະອົງ. ສິ່ງນີ້ເປັນຍ້ອນວ່າພວກເຂົາບໍ່ຮູ້ຈັກພຣະເຈົ້າບໍ? ໃນປັດຈຸບັນນີ້, ຖ້າພວກເຈົ້າຍັງບໍ່ຮູ້ຈັກພຣະເຈົ້າ, ເປັນໄປໄດ້ວ່າພວກເຈົ້າກໍອາດຈະກາຍເປັນຄົນຢູດາເຊັ່ນກັນ ແລະ ຖ້າເປັນດັ່ງນັ້ນ ເຫດການທີ່ເສົ້າສະຫຼົດໃຈຂອງການໄຖ່ບາບດ້ວຍການຄຶງໃສ່ໄມ້ກາງແຂນຂອງພຣະເຢຊູໃນຍຸກແຫ່ງພຣະຄຸນເມື່ອສອງພັນປີກ່ອນນັ້ນ ກໍຈະເກີດຂຶ້ນອີກ. ພວກເຈົ້າບໍ່ເຊື່ອໃນສິ່ງນີ້ບໍ? ນີ້ແມ່ນຄວາມຈິງ! ປັດຈຸບັນນີ້, ຜູ້ຄົນສ່ວນຫຼາຍແມ່ນຕົກຢູ່ໃນສະພາບຄ້າຍຄືກັນນີ້; ເຮົາອາດຈະເວົ້າສິ່ງດັ່ງກ່າວນີ້ໄວເກີນໄປ ແລະ ຄົນດັ່ງກ່າວແມ່ນສະແດງບົດບາດເປັນຄົນຢູດາກັນທັງໝົດ. ເຮົາບໍ່ໄດ້ເວົ້າແບບໄຮ້ເຫດຜົນ, ແຕ່ເວົ້າຕາມຄວາມຈິງ ແລະ ເຈົ້າຕ້ອງເຊື່ອ. ເຖິງວ່າຫຼາຍຄົນຈະທຳທ່າເປັນຄົນຖ່ອມຕົນ, ແຕ່ໃນຈິດໃຈຂອງພວກເຂົາແມ່ນບໍ່ມີຫຍັງນອກຈາກສະນໍ້າທີ່ເປິເປື້ອນ ແລະ ຮ່ອງນໍ້າທີ່ເໝັນເນົ່າ. ປັດຈຸບັນນີ້ ຫຼາຍຄົນທີ່ຢູ່ໃນຄຣິສຕະຈັກແມ່ນເປັນແບບນີ້ ແລະ ພວກເຈົ້າຄິດວ່າເຮົາບໍ່ຮູ້ຫຍັງທັງສິ້ນບໍ? ທຸກມື້ນີ້ ພຣະວິນຍານຂອງເຮົາແມ່ນໄດ້ຕັດສິນໃຈເພື່ອເຮົາ ແລະ ເປັນພະຍານໃຫ້ແກ່ເຮົາແລ້ວ. ເຈົ້າຄິດວ່າເຮົາບໍ່ຮູ້ຫຍັງບໍ? ເຈົ້າຄິດວ່າເຮົາບໍ່ເຂົ້າໃຈຄວາມຄິດທີ່ບໍ່ຊື່ສັດພາຍໃນຈິດໃຈຂອງພວກເຈົ້າ ແລະ ສິ່ງທີ່ພວກເຈົ້າເກັບໄວ້ໃນໃຈບໍ? ພຣະເຈົ້າຈະຖືກຫຼອກລວງໄດ້ຢ່າງງ່າຍດາຍປານນັ້ນພຸ້ນບໍ? ເຈົ້າຄິດວ່າເຈົ້າສາມາດປະຕິບັດແນວໃດກໍໄດ້ຕໍ່ພຣະອົງຕາມທີ່ເຈົ້າມັກບໍ? ໃນອະດີດນັ້ນ ເຮົາເປັນຫ່ວງ ຢ້ານວ່າພວກເຈົ້າຖືກຄວບຄຸມ ແລະດ້ວຍເຫດນີ້ ເຮົາຈຶ່ງໄດ້ປ່ອຍໃຫ້ພວກເຈົ້າເປັນອິດສະຫຼະ ແຕ່ມະນຸດບໍ່ສາມາດບອກໄດ້ເລີຍວ່າເຮົາກະທຳດີກັບພວກເຂົາ. ເວລາເຮົາເອົາຄືບໃຫ້ພວກເຂົາ ແລະ ພວກເຂົາພັດເອົາສອກ. ໃຫ້ຖາມກັນເອງເບິ່ງ: ເຮົາເກືອບຈະບໍ່ໄດ້ຈັດການຜູ້ໃດ ແລະ ເກືອບຈະບໍ່ເຄີຍຕຳນິຜູ້ໃດເລີຍ. ແຕ່ເຖິງຢ່າງນັ້ນກໍຕາມ

ເຮົາຮູ້ຢ່າງຈະແຈ້ງກ່ຽວກັບແຮງຈູງໃຈ ແລະ ແນວຄວາມຄິດຂອງມະນຸດ. ເຈົ້າຄິດວ່າພຣະເຈົ້າ ທີ່ເປັນພະຍານ ແມ່ນພຣະເຈົ້າທີ່ໂງ່ຈ້າບໍ? ໃນກໍລະນີນັ້ນ ເຮົາກໍ່ຂໍເວົ້າວ່າເຈົ້າຕາບອດຫຼາຍ! ເຮົາຈະບໍ່ເປີດໂປງເຈົ້າ, ແຕ່ໃຫ້ພວກເຮົາລອງເບິ່ງວ່າເຈົ້າຈະສາມາດເປັນຄົນຊົ່ວຊ້າໄດ້ສໍ່າໃດ. ລອງເບິ່ງວ່າກົນອຸບາຍອັນສະຫຼາດຫຼັກແຫຼມນ້ອຍໆຂອງເຈົ້າຈະສາມາດຊ່ວຍເຈົ້າໄດ້ ຫຼື ບໍ່ ຫຼື ວ່າການທີ່ເຈົ້າພະຍາຍາມຢ່າງສຸດຄວາມສາມາດເພື່ອທີ່ຈະຮັກພຣະເຈົ້າຈະສາມາດຊ່ວຍເຈົ້າໄດ້ ຫຼື ບໍ່. ມື້ນີ້, ເຮົາຈະບໍ່ປະນາມເຈົ້າ ແຕ່ຈະລໍຖ້າຈົນເຖິງເວລາຂອງພຣະເຈົ້າ ເພື່ອເບິ່ງວ່າພຣະອົງຈະມອບຜົນກໍາຕາມສະໜອງໃຫ້ແກ່ເຈົ້າແນວໃດ. ເຮົາບໍ່ມີເວລາມາໂອ້ລົມໂດຍບໍ່ມີປະໂຫຍດກັບເຈົ້າໃນເວລານີ້ ແລະ ເຮົາບໍ່ເຕັມໃຈທີ່ຈະເຮັດໃຫ້ພາລະກິດອັນຍິ່ງໃຫຍ່ຂອງເຮົາຕ້ອງມີຄວາມຊັກຊ້າເພື່ອຜົນປະໂຫຍດຂອງເຈົ້າ. ໂຕໜອນຄືເຈົ້າບໍ່ຄູ່ຄວນທີ່ຈະໃຫ້ພຣະເຈົ້າເສຍເວລາຂອງພຣະອົງ ເພື່ອມາຈັດການກັບເຈົ້າ. ສະນັ້ນ, ໃຫ້ລອງເບິ່ງວ່າເຈົ້າຈະສາມາດເສື່ອມໂຊມໄດ້ສໍ່າໃດ. ຄົນແບບນີ້ບໍ່ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າແມ່ນແຕ່ໜ້ອຍດຽວ ຫຼື ພວກເຂົາມີຄວາມຮັກຕໍ່ພຣະອົງແມ່ນແຕ່ໜ້ອຍດຽວ, ແຕ່ເຖິງຢ່າງນັ້ນ ພວກເຂົາກໍຍັງປາຖະໜາທີ່ຈະໃຫ້ພຣະເຈົ້າເອີ້ນພວກເຂົາວ່າເປັນຄົນທີ່ມີຄວາມຊອບທໍາ. ນີ້ບໍ່ແມ່ນເລື່ອງຕະຫຼົກບໍ? ເນື່ອງຈາກວ່າ ທີ່ຈິງແລ້ວ ຍັງມີຄົນຈໍານວນໜຶ່ງທີ່ຊື່ສັດ, ສະນັ້ນເຮົາຈະສືບຕໍ່ພຽງໃສ່ໃຈໃນການສະໜອງຊີວິດໃຫ້ແກ່ມະນຸດເທົ່ານັ້ນ. ເຮົາຈະເຮັດສິ່ງທີ່ເຮົາຄວນເຮັດໃນປັດຈຸບັນເທົ່ານັ້ນ, ແຕ່ໃນອະນາຄົດເຮົາຈະນໍາເອົາຜົນກໍາຕາມນະໜອງມາສູ່ແຕ່ລະຄົນຕາມສິ່ງທີ່ຂອງພວກເຂົາໄດ້ກະທໍາໄວ້. ເຮົາໄດ້ເວົ້າທຸກສິ່ງໄປໝົດແລ້ວ ຍ້ອນວ່າ ນີ້ແມ່ນພາລະກິດທີ່ເຮົາກະທໍາ. ເຮົາເຮັດແຕ່ໃນສິ່ງທີ່ເຮົາຄວນເຮັດເທົ່ານັ້ນ ແລະ ບໍ່ເຮັດໃນສິ່ງທີ່ບໍ່ຄວນເຮັດ, ເຖິງຢ່າງໃດກໍຕາມ ເຮົາຫວັງວ່າພວກເຈົ້າຈະໃຊ້ເວລາເພີ່ມເຕີມເພື່ອໄຕ່ຕອງວ່າ: ຄວາມຮູ້ຂອງພວກເຈົ້າກ່ຽວກັບພຣະເຈົ້າແມ່ນແທ້ຈິງຫຼາຍສໍ່າໃດ? ເຈົ້າແມ່ນບຸກຄົນທີ່ຈະຕອກພຣະເຈົ້າໃສ່ໄມ້ກາງແຂນອີກຄັ້ງບໍ? ຄໍາເວົ້າສຸດທ້າຍຂອງເຮົາກໍຄື: ຈົ່ງວິບັດແກ່ຜູ້ທີ່ຄຶງພຣະເຈົ້າໃສ່ໄມ້ກາງແຂນ.

# ວິທີເຂົ້າສູ່ສະພາບປົກກະຕິ

ຍິ່ງຄົນຍອມຮັບເອົາພຣະທຳຂອງພຣະເຈົ້າຫຼາຍເທົ່າໃດ ພວກເຂົາກໍຍິ່ງໄດ້ຮັບຄວາມສະຫວ່າງຫຼາຍຂຶ້ນເທົ່ານັ້ນ ແລະ ພວກເຂົາກໍຍິ່ງຫິວ ແລະ ກະຫາຍທີ່ຈະສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າຫຼາຍຂຶ້ນເທົ່ານັ້ນ. ມີແຕ່ຜູ້ທີ່ຮັບເອົາພຣະທຳຂອງພຣະເຈົ້າເທົ່ານັ້ນຈຶ່ງສາມາດມີປະສົບການອັນເລິກເຊິ່ງ ແລະ ລໍ້າຄ່າຍິ່ງຂຶ້ນ ແລະ ພວກເຂົາເທົ່ານັ້ນເປັນຜູ້ທີ່ມີຊີວິດສືບຕໍ່ງອກງາມຄືກັບດອກງາ. ທຸກຄົນທີ່ສະແຫວງຫາຊີວິດຕ້ອງຖືສິ່ງນີ້ຄືກັບວ່າແມ່ນວຽກງານເຕັມເວລາຂອງພວກເຂົາ; ພວກເຂົາຄວນມີຄວາມຮູ້ສຶກວ່າ “ຫາກປາສະຈາກພຣະເຈົ້າ, ຂ້ານ້ອຍບໍ່ສາມາດມີຊີວິດໄດ້ ຫາກປາສະຈາກພຣະເຈົ້າ, ຂ້ານ້ອຍບໍ່ສາມາດສໍາເລັດຫຍັງໄດ້; ຫາກປາສະຈາກພຣະເຈົ້າ, ທຸກສິ່ງແມ່ນວ່າງເປົ່າ”. ແລ້ວເຊັ່ນດຽວກັນ, ຖ້າພວກເຂົາມີຄວາມຕັ້ງໃຈວ່າ “ຖ້າປາສະຈາກການສະຖິດຂອງພຣະວິນຍານບໍລິສຸດ, ຂ້ານ້ອຍຈະບໍ່ເຮັດຫຍັງ ແລະ ຖ້າການອ່ານພຣະທຳຂອງພຣະເຈົ້າບໍ່ມີຜົນຫຍັງ, ແລ້ວຂ້ານ້ອຍກໍຈະບໍ່ສົນໃຈເຮັດຫຍັງ”. ຢ່າຕາມໃຈຕົນເອງ. ປະສົບການຊີວິດແມ່ນມາຈາກຄວາມສະຫວ່າງ ແລະ ການນໍາພາຂອງພຣະເຈົ້າ ແລະ ພວກມັນແມ່ນການຜະລິດຂອງຄວາມພະຍາຍາມສ່ວນຕົວຂອງພວກເຈົ້າ. ສິ່ງທີ່ພວກເຈົ້າຄວນຮຽກຮ້ອງຈາກຕົນເອງກໍຄື “ເມື່ອເວົ້າເຖິງປະສົບການຊີວິດ, ຂ້ານ້ອຍບໍ່ສາມາດເອົາໂຕເອງລອດໄປຢ່າງງ່າຍດາຍໄດ້”.

ບາງຄັ້ງ ໃນສະພາວະທີ່ບໍ່ປົກກະຕິ, ເຈົ້າສູນເສຍການສະຖິດຂອງພຣະເຈົ້າ ແລະ ບໍ່ສາມາດສໍາຜັດພຣະອົງໄດ້ ເມື່ອເຈົ້າອະທິຖານ. ມັນປົກກະຕິທີ່ຈະຮູ້ສຶກຢ້ານໃນເວລາດັ່ງກ່າວ. ເຈົ້າຄວນເລີ່ມສະແຫວງຫາທັນທີ. ຖ້າເຈົ້າບໍ່ສະແຫວງຫາ, ພຣະເຈົ້າກໍຈະຫ່າງອອກຈາກເຈົ້າ ແລະ ເຈົ້າກໍຈະບໍ່ມີການສະຖິດຂອງພຣະວິນຍານບໍລິສຸດ ແລະ ຍິ່ງໄປກວ່ານັ້ນແມ່ນພາລະກິດຂອງພຣະວິນຍານບໍລິສຸດ ເປັນເວລາໜຶ່ງມື້ ຫຼື ສອງມື້, ແມ່ນແຕ່ໜຶ່ງເດືອນ ຫຼື ສອງເດືອນ. ໃນສະຖານະການເຫຼົ່ານີ້, ເຈົ້າຈະມຶນຊາຫຼາຍ ແລະ ເຈົ້າຖືກຈັບເປັນສະເລີຍຂອງຊາຕານອີກຄັ້ງ, ຈົນເຖິງຈຸດທີ່ເຈົ້າບໍ່ສາມາດເຮັດທຸກສິ່ງໄດ້. ເຈົ້າປາຖະໜາຄວາມຮັ່ງມີ, ຫຼອກລວງອ້າຍເອື້ອຍນ້ອງ, ເບິ່ງຮູບເງົາ ແລະ ວີດີໂອ, ຫຼິ້ນໄພ້ນົກກະຈອກ ແລະ ແມ່ນແຕ່ສູບຢາ ແລະ ດື່ມຢ່າງຂາດວິໄນ. ຫົວໃຈຂອງເຈົ້າອອກຫ່າງພຣະເຈົ້າ, ເຈົ້າໄປໃນທາງຂອງເຈົ້າເອງຢ່າງລັບໆ ແລະ ເຈົ້າຕັດສິນພາລະກິດຂອງພຣະເຈົ້າຕາມອໍາເພີໃຈ. ໃນບາງກໍລະນີ, ຜູ້ຄົນຕົກຕໍ່າຫຼາຍຈົນພວກເຂົາບໍ່ຮູ້ສຶກລະອາຍ ຫຼື ອັບອາຍໃນການເຮັດບາບຮ່ວມທີ່ມີລັກສະນະທາງເພດ. ຄົນປະເພດນີ້ຖືກພຣະວິນຍານບໍລິສຸດປະຖິ້ມ; ທີ່ຈິງແລ້ວ ບໍ່ມີພາລະກິດຂອງພຣະວິນຍານບໍລິສຸດໃນບຸກຄົນດັ່ງກ່າວເປັນເວລາດົນນານມາແລ້ວ. ຄົນໆໜຶ່ງສາມາດເຫັນວ່າພວກເຂົາຕົກລົງສູ່ຄວາມເສື່ອມຊາມຫຼາຍຂຶ້ນ ໃນຂະນະທີ່ມືອັນຊົ່ວຮ້າຍເດ່ອອກໄປເລື້ອຍໆ. ໃນທີ່ສຸດ ພວກເຂົາກໍປະຕິເສດການມີຢູ່ຂອງທາງເສັ້ນນີ້ ແລະ ກາຍເປັນສະເລີຍຂອງຊາຕານເມື່ອພວກເຂົາເຮັດບາບ. ຖ້າເຈົ້າຄົ້ນພົບວ່າ ເຈົ້າມີການສະຖິດຂອງພຣະວິນຍານບໍລິສຸດ ແຕ່ຂາດພາລະກິດຂອງພຣະວິນຍານບໍລິສຸດ, ນັ້ນກໍເປັນສະຖານະການທີ່ອັນຕະລາຍແລ້ວ. ເມື່ອເຈົ້າບໍ່ສາມາດສໍາຜັດການສະຖິດຂອງພຣະວິນຍານບໍລິສຸດ

ໄດ້, ແລ້ວເຈົ້າກໍ ກໍາລັງໃກ້ຈະຕາຍ. ຖ້າເຈົ້າຍັງບໍ່ກັບໃຈ ແລ້ວເຈົ້າກໍຈະຖືກສົ່ງກັບຄືນໃຫ້ຊາຕານຢ່າງສົມບູນ ແລະ ເຈົ້າຈະກາຍເປັນຜູ້ໜຶ່ງທີ່ຈະຖືກກໍາຈັດ. ສະນັ້ນ ເມື່ອເຈົ້າຄົ້ນພົບວ່າ ເຈົ້າຢູ່ໃນສະພາບທີ່ມີພຽງການສະຖິດຂອງພຣະວິນຍານບໍລິສຸດສະຖິດ (ເຈົ້າບໍ່ເຮັດບາບ, ເຈົ້າກວດສອບຕົນເອງ ແລະ ເຈົ້າບໍ່ຕັ້ງໃຈຕໍ່ຕ້ານພຣະເຈົ້າ) ແຕ່ເຈົ້າຂາດພາລະກິດຂອງພຣະວິນຍານບໍລິສຸດ (ເຈົ້າບໍ່ໄດ້ຮູ້ສຶກວ່າຮັບການດົນເມື່ອເຈົ້າອະທິຖານ, ເຈົ້າບໍ່ໄດ້ຮັບຄວາມສະຫວ່າງ ແລະ ແສງໄຟເຍືອງທາງທີ່ຊັດເຈນ ເມື່ອເຈົ້າກິນ ແລະ ດື່ມພຣະທໍາຂອງພຣະເຈົ້າ, ເຈົ້າເມີນເສີຍກ່ຽວກັບກິນ ແລະ ດື່ມພຣະທໍາຂອງພຣະເຈົ້າ, ບໍ່ມີການເຕີບໃຫຍ່ໃນຊີວິດຂອງເຈົ້າ ແລະ ເຈົ້າບໍ່ມີແສງໄຟເຍືອງທາງທີ່ຍິ່ງໃຫຍ່), ໃນເວລາດັ່ງກ່າວເຈົ້າກໍຕ້ອງລະມັດລະວັງຫຼາຍຂຶ້ນ. ເຈົ້າຕ້ອງບໍ່ເຮັດຕາມໃຈຕົນເອງ, ເຈົ້າຕ້ອງບໍ່ເຮັດຕາມນິໄສຂອງຕົນເອງອີກຕໍ່ໄປ, ການສະຖິດຂອງພຣະວິນຍານບໍລິສຸດອາດຫາຍໄປໃນເວລາໃດກໍໄດ້. ນີ້ຄືເຫດຜົນທີ່ວ່າເປັນຫຍັງ ສະຖານະການດັ່ງກ່າວຈຶ່ງອັນຕະລາຍ. ຖ້າເຈົ້າຄົ້ນພົບວ່າຕົນເອງຢູ່ສະພາບແບບນີ້, ໃຫ້ພະຍາຍາມແກ້ໄຂໄວເທົ່າທີ່ເຈົ້າສາມາດເຮັດໄດ້. ກ່ອນອື່ນ, ເຈົ້າຄວນອະທິຖານເພື່ອກັບໃຈ ແລະ ຂໍໃຫ້ພຣະເຈົ້າຂະຫຍາຍຄວາມເມດຕາຂອງພຣະອົງສໍາລັບເຈົ້າອີກຄັ້ງ. ອະທິຖານຢ່າງຈິງຈັງ ແລະ ສະຫງົບໃຈຂອງເຈົ້າເພື່ອກິນ ແລະ ດື່ມພຣະທໍາຂອງພຣະເຈົ້າ. ດ້ວຍພື້ນຖານນີ້ ເຈົ້າຕ້ອງໃຊ້ເວລາຫຼາຍຂຶ້ນໃນການອະທິຖານຫຼາຍ; ເພີ່ມຄວາມພະຍາຍາມຂອງເຈົ້າສອງເທົ່າໃນການຮ້ອງເພງ, ການອະທິຖານ, ການກິນ ແລະ ການດື່ມພຣະທໍາຂອງພຣະອົງ ແລະ ການປະຕິບັດໜ້າທີ່ຂອງເຈົ້າ. ເມື່ອເຈົ້າຢູ່ຈຸດທີ່ອ່ອນແອທີ່ສຸດ, ຫົວໃຈຂອງເຈົ້າກໍຖືກຄອບຄອງໂດຍຊາຕານໄດ້ງ່າຍທີ່ສຸດ. ເມື່ອສິ່ງນັ້ນເກີດຂຶ້ນ, ຫົວໃຈຂອງເຈົ້າກໍຈະຖືກຍາດເອົາໄປຈາກພຣະເຈົ້າ ແລະ ຖືກມອບກັບຄືນໃຫ້ຊາຕານ, ຫຼັງຈາກນັ້ນ ເຈົ້າກໍຈະບໍ່ມີການສະຖິດຂອງພຣະວິນຍານບໍລິສຸດ. ໃນເວລາດັ່ງກ່າວ, ມັນກໍຍິ່ງເປັນການຍາກເປັນສອງເທົ່າທີ່ຈະເອົາພາລະກິດຂອງພຣະວິນຍານບໍລິສຸດກັບຄືນມາ. ມັນດີກວ່າທີ່ຈະສະແຫວງຫາພາລະກິດຂອງພຣະວິນຍານບໍລິສຸດໃນຂະນະທີ່ພຣະອົງຍັງສະຖິດຢູ່ກັບເຈົ້າ, ເຊິ່ງຈະເຮັດໃຫ້ພຣະເຈົ້າມອບແສງສະຫວ່າງໃຫ້ເຈົ້າເພີ່ມ ແລະ ບໍ່ເຮັດໃຫ້ພຣະອົງປະຖິ້ມອອກຈາກເຈົ້າ. ການອະທິຖານ, ຮ້ອງເພງສັນລະເສີນ, ການປະຕິບັດໜ້າທີ່ຂອງເຈົ້າ ແລະ ການກິນ ແລະ ດື່ມພຣະທໍາຂອງພຣະເຈົ້າ, ທຸກສິ່ງນີ້ແມ່ນເຮັດເພື່ອວ່າຊາຕານຈະບໍ່ມີໂອກາດເຮັດວຽກງານຂອງມັນ ແລະ ເພື່ອວ່າພຣະວິນຍານບໍລິສຸດອາດປະຕິບັດພາລະກິດພາຍໃນຕົວເຈົ້າ. ຖ້າເຈົ້າບໍ່ເອົາພາລະກິດຂອງພຣະວິນຍານກັບຄືນມາດ້ວຍວິທີນີ້, ຖ້າເຈົ້າພຽງແຕ່ລໍຖ້າ, ແລ້ວການຮັບພາລະກິດຂອງພຣະວິນຍານບໍລິສຸດຄືນກໍຈະບໍ່ງ່າຍເມື່ອເຈົ້າໄດ້ສູນເສຍການສະຖິດຂອງພຣະວິນຍານບໍລິສຸດ, ນອກຈາກພຣະວິນຍານບໍລິສຸດຈະບັນດານໃຈໂດຍສະເພາະ, ເຍືອງທາງ ແລະ ມອບແສງສະຫວ່າງໃຫ້ເຈົ້າເປັນພິເສດ. ເຖິງຢ່າງນັ້ນກໍຕາມ ມັນບໍ່ໄດ້ໃຊ້ເວລາໜຶ່ງມື້ ຫຼື ສອງມື້ ເພື່ອໃຫ້ສະພາບຂອງເຈົ້າຟື້ນຄືນມາ; ບາງຄັ້ງ ເວລາຜ່ານໄປຫົກເດືອນໂດຍບໍ່ມີການຟື້ນຄືນ. ທັງໝົດນີ້ກໍຍ້ອນວ່າຜູ້ຄົນມັກງ່າຍເກີນໄປ, ບໍ່ສາມາດຜະເຊີນກັບສິ່ງຕ່າງໆໃນທາງທີ່ເປັນປົກກະຕິ ແລະ ສະນັ້ນ ຈຶ່ງຖືກພຣະວິນຍານບໍລິສຸດປະຖິ້ມ. ເຖິງແມ່ນວ່າເຈົ້າໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດກັບຄືນ, ພາລະກິດໃນປັດຈຸບັນຂອງພຣະເຈົ້າກໍອາດບໍ່ຊັດເຈນສໍາລັບເຈົ້າຫຼາຍ, ຍ້ອນເຈົ້າໄດ້

ຢູ່ຫຼັງໃນປະສົບການຊີວິດຂອງເຈົ້າ, ຄືກັບວ່າເຈົ້າຖືກປະໄວ້ຢູ່ທາງຫຼັງສິບພັນໄມລ໌. ນີ້ບໍ່ແມ່ນສິ່ງທີ່ໂຫດຮ້າຍບໍ? ເຖິງຢ່າງໃດກໍຕາມ, ເຮົາບອກຄົນປະເພດນັ້ນວ່າ: ມັນຍັງບໍ່ຊ້າເກີນໄປທີ່ຈະກັບໃຈໃນຕອນນີ້, ແຕ່ວ່າມີເງື່ອນໄຂໜຶ່ງຢ່າງຄື ເຈົ້າຕ້ອງເຮັດວຽກໃຫ້ໜັກຂຶ້ນ ແລະ ບໍ່ຕ້ອງຂີ້ຄ້ານ. ຖ້າຄົນອື່ນອະທິຖານຫ້າເທື່ອຕໍ່ມື້, ເຈົ້າກໍຕ້ອງອະທິຖານສິບເທື່ອ; ຖ້າຄົນອື່ນກິນ ແລະ ດື່ມພຣະທຳຂອງພຣະເຈົ້າສອງຊົ່ວໂມງຕໍ່ມື້ ເຈົ້າກໍຕ້ອງໃຊ້ເວລາສີ່ ຫຼື ຫົກຊົ່ວໂມງ; ຖ້າຄົນອື່ນຟັງເພງສັນລະເສີນສອງຊົ່ວໂມງ, ເຈົ້າກໍຕ້ອງຟັງຢ່າງໜ້ອຍເຄິ່ງມື້. ຈົ່ງໝັ້ນສະຫງົບຈິດໃຈຕໍ່ໜ້າພຣະເຈົ້າ ແລະ ຄິດໄຕ່ຕອງຫາຄວາມຮັກຂອງພຣະອົງ; ຈົນກວ່າເຈົ້າຈະໄດ້ຮັບການດົນໃຈ, ຫົວໃຈຂອງເຈົ້າກັບຄືນຫາພຣະອົງ ແລະ ເຈົ້າບໍ່ກ້າທີ່ຈະໜີອອກຈາກພຣະອົງອີກຕໍ່ໄປ, ມີພຽງເມື່ອນັ້ນ ການປະຕິບັດຂອງເຈົ້າຈຶ່ງຈະອອກຜົນ; ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະສາມາດຟື້ນຟູສະພາບດັ່ງເດີມທີ່ເປັນປົກກະຕິເປັນປົກກະຕິຂອງເຈົ້າໄດ້.

ບາງຄົນສະແຫວງຫາຢ່າງກະຕືລືລົ້ນ ແຕ່ບໍ່ສາມາດເຂົ້າສູ່ທາງທີ່ຖືກຕ້ອງ. ນີ້ກໍຍ້ອນວ່າ ພວກເຂົາບໍ່ລະມັດລະວັງ ແລະ ບໍ່ເອົາໃຈໃສ່ເລື່ອງທາງຈິດວິນຍານ. ພວກເຂົາບໍ່ຮູ້ວິທີທີ່ຈະຜະເຊີນກັບພຣະທຳຂອງພຣະເຈົ້າ ແລະ ພວກເຂົາບໍ່ຮູ້ວ່າ ພາລະກິດ ແລະ ການສະຖິດຂອງພຣະວິນຍານບໍລິສຸດແມ່ນຫຍັງ. ຄົນດັ່ງກ່າວກະຕືລືລົ້ນແຕ່ວ່າໂງ່ຈ້າ; ພວກເຂົາບໍ່ໄດ້ສະແຫວງຫາຊີວິດ. ນັ້ນກໍເພາະວ່າພວກເຂົາບໍ່ມີຄວາມຮູ້ກ່ຽວກັບພຣະວິນຍານບໍລິສຸດແມ່ນແຕ່ໜ້ອຍດຽວ, ເຈົ້າບໍ່ຮູ້ຫຍັງກ່ຽວກັບຄວາມຄືບໜ້າໃນພາລະກິດຂອງພຣະວິນຍານບໍລິສຸດທີ່ກຳລັງດຳເນີນໃນຕອນນີ້ ແລະ ເຈົ້າບໍ່ຮູ້ສະພາບທີ່ຢູ່ພາຍໃນຈິດວິນຍານຂອງເຈົ້າເອງ. ຄວາມເຊື່ອຂອງຄົນດັ່ງກ່າວບໍ່ແມ່ນຄວາມເຊື່ອປະເພດທີ່ໂງ່ຈ້າບໍ? ການສະແຫວງຫາຂອງຄົນດັ່ງກ່າວບໍ່ໄດ້ເກີດຜົນຫຍັງເລີຍໃນທີ່ສຸດ. ກະແຈສູ່ການບັນລຸການເຕີບໂຕໃນຊີວິດໃນຄວາມເຊື່ອຂອງຄົນໆທີ່ມີໃນພຣະເຈົ້າກໍຄືການຮູ້ວ່າພຣະເຈົ້າປະຕິບັດພາລະກິດຫຍັງໃນປະສົບການຂອງເຈົ້າ, ເຫັນເຖິງຄວາມເປັນຕາຮັກຂອງພຣະເຈົ້າ ແລະ ເຂົ້າໃຈຄວາມປະສົງຂອງພຣະເຈົ້າເພື່ອວ່າເຈົ້າຈະຍອມຮັບທຸກການຈັດແຈງທັງໝົດຂອງພຣະອົງ, ຮັບເອົາພຣະທຳທີ່ພຣະເຈົ້າກ່າວເຂົ້າໃນຕົວເຈົ້າ ເພື່ອໃຫ້ພວກມັນກາຍມາເປັນຊີວິດຂອງເຈົ້າ, ແລ້ວເຮັດໃຫ້ພຣະເຈົ້າເພິ່ງພໍໃຈ. ຖ້າເຈົ້າມີຄວາມເຊື່ອທີ່ໂງ່ຈ້າ, ຖ້າເຈົ້າບໍ່ສົນໃຈເລື່ອງຈິດວິນຍານ ແລະ ການປ່ຽນແປງຊີວິດ-ອຸປະນິໄສຂອງເຈົ້າ, ຖ້າເຈົ້າບໍ່ພະຍາຍາມໄປຫາຄວາມຈິງ, ເຈົ້າຈະສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້ບໍ? ຖ້າເຈົ້າບໍ່ເຂົ້າໃຈສິ່ງທີ່ພຣະເຈົ້າຮ້ອງຂໍ, ແລ້ວເຈົ້າຈະບໍ່ສາມາດມີປະສົບການ ແລະ ບໍ່ມີເສັ້ນທາງໃຫ້ປະຕິບັດ. ສິ່ງທີ່ເຈົ້າຕ້ອງໃສ່ໃຈໃນຂະນະທີ່ເຈົ້າຜະເຊີນກັບພຣະທຳຂອງພຣະເຈົ້າແມ່ນຜົນຕາມມາທີ່ພວກເຂົາສ້າງຂຶ້ນໃນຕົວເຈົ້າ, ເພື່ອເຈົ້າອາດມາຮູ້ຈັກພຣະເຈົ້າຈາກພຣະທຳຂອງພຣະອົງ. ຖ້າເຈົ້າພຽງແຕ່ຮູ້ຈັກອ່ານພຣະທຳຂອງພຣະເຈົ້າ ແຕ່ບໍ່ຮູ້ຈັກວິທີການຜະເຊີນກັບພຣະທຳເຫຼົ່ານັ້ນ, ນີ້ບໍ່ສະແດງວ່າ ເຈົ້າບໍ່ມີຄວາມເຂົ້າໃຈໃນເລື່ອງຈິດວິນຍານບໍ? ໃນຕອນນີ້, ຄົນສ່ວນຫຼາຍບໍ່ສາມາດສຳຜັດພຣະທຳຂອງພຣະເຈົ້າ, ແລະພວກເຂົາກໍບໍ່ຮູ້ພາລະກິດຂອງພຣະເຈົ້າ. ສິ່ງນີ້ບໍ່ແມ່ນຄວາມລົ້ມເຫຼວການປະຕິບັດຂອງພວກເຂົາບໍ? ຖ້າພວກເຂົາສືບຕໍ່ເປັນແບບນີ້, ໃນຈຸດໃດພວກເຂົາຈຶ່ງຈະສາມາດຜະເຊີນກັບສິ່ງຕ່າງໆຢ່າງຄົບຖ້ວນສົມບູນຂອງ ແລະ ເຕີບໂຕໃນຊີວິດຂອງພວກເຂົາ? ສິ່ງນີ້ບໍ່ເທົ່າກັບພຽງແຕ່ລົມປາກບໍ?

ມີຫຼາຍຄົນທ່າມກາງພວກເຈົ້າທີ່ໃສ່ໃຈກັບທິດສະດີ, ຜູ້ທີ່ບໍ່ເຂົ້າໃຈເລື່ອງຈິດວິນຍານ ແຕ່ຍັງຢາກໃຫ້ພຣະເຈົ້າໃຊ້ພວກເຈົ້າເພື່ອສິ່ງທີ່ຍິ່ງໃຫຍ່ ແລະ ເພື່ອໃຫ້ພຣະອົງໃຫ້ພອນ. ສິ່ງນີ້ບໍ່ເປັນຈິງແທ້ໆເລີຍ! ສະນັ້ນ ພວກເຈົ້າຕ້ອງສິ້ນສຸດຄວາມລົ້ມເຫຼວນີ້, ເພື່ອພວກເຈົ້າຈະສາມາດເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນຊີວິດທາງຈິດວິນຍານຂອງພວກເຈົ້າ, ມີປະສົບການທີ່ແທ້ຈິງ ແລະ ເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າຢ່າງແທ້ຈິງ.

# ວິທີຮັບໃຊ້ໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ

ເມື່ອຄົນໆໜຶ່ງເຊື່ອໃນພຣະເຈົ້າ, ຄົນໆນັ້ນຄວນຮັບໃຊ້ພຣະອົງແນວໃດແທ້ໆ? ມີເງື່ອນໄຂຫຍັງແດ່ທີ່ຄວນປະຕິບັດຕາມ ແລະ ມີຄວາມຈິງຫຍັງແດ່ທີ່ຄົນທີ່ຮັບໃຊ້ພຣະເຈົ້າຄວນເຂົ້າໃຈ? ແລ້ວພວກເຈົ້າອາດຫັນເຫຢູ່ບ່ອນໃດໃນການຮັບໃຊ້ຂອງພວກເຈົ້າ? ພວກເຈົ້າຄວນຮູ້ຈັກຄຳຕອບຕໍ່ທຸກສິ່ງເຫຼົ່ານີ້. ບັນຫາເຫຼົ່ານີ້ຈະບົ່ງບອກເຖິງວິທີທີ່ພວກເຈົ້າເຊື່ອໃນພຣະເຈົ້າ ແລະ ວິທີທີ່ພວກເຈົ້າຍ່າງບົນເສັ້ນທາງທີ່ນຳພາໂດຍພຣະວິນຍານບໍລິສຸດ ແລະ ຍອມອ່ອນນ້ອມຕໍ່ການປັ້ນແຕ່ງຂອງພຣະເຈົ້າໃນທຸກສິ່ງ, ເຊິ່ງດ້ວຍເຫດນັ້ນຈຶ່ງຈະເຮັດໃຫ້ພວກເຈົ້າເຂົ້າໃຈທຸກຂັ້ນຕອນໃນພາລະກິດຂອງພຣະເຈົ້າທີ່ປະຕິບັດໃນຕົວພວກເຈົ້າ. ເມື່ອພວກເຈົ້າໄປເຖິງຈຸດນັ້ນ, ພວກເຈົ້າຈະເຂົ້າໃຈວ່າແມ່ນຫຍັງຄືຄວາມເຊື່ອຕໍ່ພຣະເຈົ້າ, ວິທີການເຊື່ອໃນພຣະເຈົ້າຢ່າງຖືກຕ້ອງ ແລະ ສິ່ງທີ່ພວກເຈົ້າຄວນເຮັດປະຕິບັດໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ສິ່ງນີ້ຈະເຮັດໃຫ້ພວກເຈົ້າເຊື່ອຟັງພາລະກິດຂອງພຣະເຈົ້າຢ່າງສົມບູນແບບ ແລະ ຢ່າງເຕັມທີ່; ພວກເຈົ້າຈະບໍ່ມີການຕໍ່ວ່າ ແລະ ພວກເຈົ້າຈະບໍ່ຕັດສິນ ຫຼື ວິເຄາະ, ແຮງໄກທີ່ຈະຄົ້ນຄວ້າພາລະກິດຂອງພຣະເຈົ້າ. ເມື່ອເປັນດັ່ງນັ້ນ, ພວກເຈົ້າທຸກຄົນຈະສາມາດເຊື່ອຟັງພຣະເຈົ້າຈົນເຖິງມື້ຕາຍ, ຍິນຍອມໃຫ້ພຣະເຈົ້າບັນຊາພວກເຈົ້າ ແລະ ສັງເວີຍພວກເຈົ້າຄືດັ່ງໂຕແກະເພື່ອວ່າພວກເຈົ້າທຸກຄົນຈະໄດ້ສາມາດມາກາຍເປັນເປໂຕແຫ່ງຊຸມປີ 1990 ແລະ ສາມາດຮັກພຣະເຈົ້າຢ່າງສຸດໃຈໂດຍບໍ່ມີການຕໍ່ວ່າຫຍັງທັງສິ້ນເຖິງແມ່ນວ່າຈະຖືກຄຶງໃສ່ໄມ້ກາງແຂນກໍ່ຕາມ. ໃນຕອນນັ້ນເອງ ພວກເຈົ້າຈຶ່ງຈະສາມາດດຳລົງຊີວິດເໝືອນເປໂຕແຫ່ງຊຸມປີ 1990.

ທຸກຄົນທີ່ໄດ້ຕັດສິນໃຈຢ່າງເດັດດ່ຽວທີ່ຈະຮັບໃຊ້ພຣະເຈົ້າ, ແຕ່ຕ້ອງແມ່ນຄົນທີ່ເອົາໃຈໃສ່ຄວາມປະສົງຂອງພຣະເຈົ້າ ແລະ ເຂົ້າໃຈຄວາມປະສົງຂອງພຣະເຈົ້າເທົ່ານັ້ນຈຶ່ງມີຄຸນສົມບັດ ແລະ ມີສິດທີ່ຈະຮັບໃຊ້ພຣະເຈົ້າໄດ້. ເຮົາໄດ້ຄົ້ນພົບສິ່ງນີ້ທ່າມກາງພວກເຈົ້າ: ຫຼາຍຄົນເຊື່ອວ່າຕາບໃດທີ່ພວກເຂົາຕັ້ງໃຈເຜີຍແຜ່ຂ່າວປະເສີດສຳລັບພຣະເຈົ້າພຣະເຈົ້າຢ່າງກະຕືລືລົ້ນ, ອອກເດີນທາງເພື່ອພຣະເຈົ້າ, ເສຍສະຫຼະຕົນເອງ ແລະ ສະຫຼະຖິ້ມສິ່ງຕ່າງໆເພື່ອພຣະເຈົ້າ ແລະ ອື່ນໆອີກ, ແລ້ວນີ້ກໍ່ແມ່ນການຮັບໃຊ້ພຣະເຈົ້າ. ແມ່ນແຕ່ຄົນທີ່ຍຶດເຄັ່ງສາສະໜາຫຼາຍຄົນເຊື່ອວ່າການຮັບໃຊ້ພຣະເຈົ້າໝາຍເຖິງການແລ່ນໄປມາໂດຍທີ່ມີພຣະຄຳພີໃນມືຂອງພວກເຂົາ, ເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນ ແລະ ຊ່ວຍເຫຼືອຜູ້ຄົນໃຫ້ລອດພົ້ນ ໂດຍເຮັດໃຫ້ພວກເຂົາກັບໃຈ ແລະ ສາລະພາບ. ນອກຈາກນັ້ນຍັງມີເຈົ້າໜ້າທີ່ໆເຄັ່ງສາສະໜາຫຼາຍຄົນທີ່ຄິດວ່າການຮັບໃຊ້ພຣະເຈົ້າປະກອບດ້ວຍການເທດສະໜາໃນໂບດ ຫຼັງຈາກທີ່ໄດ້ສືບຕໍ່ການສຶກສາຂັ້ນສູງ ແລະ ການຝຶກອົບຮົມໃນໂຮງຮຽນສອນສາສະໜາ ແລະ ສັ່ງສອນຜູ້ຄົນຜ່ານການອ່ານພຣະຄຳພີ. ຍິ່ງໄປກວ່ານັ້ນ, ມີຜູ້ຄົນທີ່ຢູ່ເຂດທຸກຍາກທີ່ເຊື່ອວ່າ ການຮັບໃຊ້ພຣະເຈົ້າໝາຍເຖິງການຮັກສາຄົນເຈັບປ່ວຍ ແລະ ການຂັບໄລ່ພວກມານຮ້າຍທີ່ຢູ່ໃນທ່າມກາງອ້າຍເອື້ອຍນ້ອງຂອງພວກເຂົາ ຫຼື ການອະທິຖານເພື່ອພວກເຂົາ ຫຼື ການຮັບໃຊ້ພວກເຂົາ. ໃນທ່າມກາງພວກເຈົ້າແມ່ນຍັງມີຫຼາຍຄົນທີ່ເຊື່ອວ່າການຮັບໃຊ້ພຣະເຈົ້າແມ່ນໝາຍເຖິງການກິນ ແລະ ການດື່ມ

ພຣະທຳຂອງພຣະເຈົ້າ, ການອະທິຖານຫາພຣະເຈົ້າທຸກມື້ ພ້ອມທັງການຢ້ຽມຢາມ ແລະ ການເຮັດວຽກໃນຄຣິສຕະຈັກຢູ່ທຸກຫົນແຫ່ງ. ມີອ້າຍເອື້ອຍນ້ອງຄົນອື່ນໆທີ່ເຊື່ອວ່າການຮັບໃຊ້ພຣະເຈົ້າໝາຍເຖິງການບໍ່ແຕ່ງດອງຈັກເທື່ອ ຫຼື ການລ້ຽງດູຄອບຄົວ ແລະ ການອຸທິດການເປັນຢູ່ທັງໝົດຂອງພວກເຂົາໃຫ້ແກ່ພຣະເຈົ້າ. ແຕ່ມີໜ້ອຍຄົນທີ່ຮູ້ແທ້ໆວ່າແມ່ນຫຍັງຄືຄວາມໝາຍຂອງການຮັບໃຊ້ພຣະເຈົ້າ. ເຖິງແມ່ນວ່າຄົນທີ່ຮັບໃຊ້ພຣະເຈົ້າຈະມີຫຼາຍຄືກັບດວງດາວໃນທ້ອງຟ້າ, ຈຳນວນຜູ້ຄົນເຫຼົ່ານັ້ນທີ່ສາມາດຮັບໃຊ້ພຣະເຈົ້າໂດຍກົງ ແລະ ຜູ້ທີ່ສາມາດຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້ານັ້ນແມ່ນມີໜ້ອຍຫຼາຍ, ໜ້ອຍທີ່ສຸດ. ເປັນຫຍັງເຮົາຈຶ່ງເວົ້າສິ່ງນີ້? ເຮົາເວົ້າສິ່ງນີ້ກໍ່ເພາະວ່າພວກເຈົ້າບໍ່ເຂົ້າໃຈແກ່ນແທ້ຂອງວະລີທີ່ວ່າ "ການຮັບໃຊ້ພຣະເຈົ້າ" ແລະ ພວກເຈົ້າເຂົ້າໃຈວິທີການຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າພຽງເລັກນ້ອຍເທົ່ານັ້ນ. ມີຄວາມຈຳເປັນອັນຮີບດ່ວນໃຫ້ຜູ້ຄົນເຂົ້າໃຈວ່າການຮັບໃຊ້ພຣະເຈົ້າປະເພດໃດທີ່ສາມາດສອດຄ່ອງກັບຄວາມປະສົງຂອງພຣະອົງໄດ້ຢ່າງແທ້ຈິງ.

ຖ້າພວກເຈົ້າປາຖະໜາທີ່ຈະຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າ, ພວກເຈົ້າຕ້ອງເຂົ້າໃຈວ່າຄົນປະເພດໃດເປັນທີ່ພໍໃຈຂອງພຣະເຈົ້າກ່ອນ, ຄົນປະເພດໃດທີ່ພຣະເຈົ້າກຽດຊັງ, ຄົນປະເພດໃດທີ່ພຣະເຈົ້າຈະເຮັດໃຫ້ສົມບູນ ແລະ ຄົນປະເພດໃດທີ່ມີຄຸນສົມບູນໃນການຮັບໃຊ້ພຣະເຈົ້າ. ຢ່າງໜ້ອຍທີ່ສຸດ ພວກເຈົ້າຄວນປະກອບດ້ວຍຄວາມຮູ້ນີ້. ນອກຈາກນີ້, ພວກເຈົ້າຄວນຮູ້ຈັກເປົ້າໝາຍພາລະກິດຂອງພຣະເຈົ້າ ແລະ ພາລະກິດທີ່ພຣະເຈົ້າຈະກະທຳໃນທີ່ນີ້ ແລະ ໃນປັດຈຸບັນນີ້. ຫຼັງຈາກເຂົ້າໃຈໃນສິ່ງນີ້ ແລະ ຜ່ານການຊີ້ນຳຈາກພຣະທຳຂອງພຣະເຈົ້າ, ພວກເຈົ້າຄວນມີທາງເຂົ້າກ່ອນ ແລະ ຮັບເອົາການຝາກຝັງຈາກພຣະເຈົ້າກ່ອນ. ຫຼັງຈາກທີ່ພວກເຈົ້າໄດ້ມີປະສົບການຕົວຈິງກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ເມື່ອພວກເຈົ້າຮູ້ຈັກພາລະກິດຂອງພຣະເຈົ້າຢ່າງແທ້ຈິງ, ພວກເຈົ້າກໍ່ຈະມີຄຸນສົມບັດທີ່ຈະຮັບໃຊ້ພຣະເຈົ້າໄດ້. ແລ້ວເມື່ອຮອດເວລາທີ່ພວກເຈົ້າຮັບໃຊ້ພຣະອົງ, ພຣະເຈົ້າກໍ່ຈະເປີດດວງຕາຝ່າຍວິນຍານຂອງພວກເຈົ້າ ແລະ ເຮັດໃຫ້ພວກເຈົ້າມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບພາລະກິດຂອງພຣະອົງ ແລະ ເບິ່ງເຫັນພາລະກິດຂອງພຣະອົງຢ່າງຊັດເຈນຍິ່ງຂຶ້ນ. ເມື່ອເຈົ້າເຂົ້າສູ່ຄວາມເປັນຈິງນີ້, ປະສົບການຂອງເຈົ້າກໍ່ຈະເລິກເຊິ່ງ ແລະ ເປັນຈິງຫຼາຍຂຶ້ນ ແລະ ພວກເຈົ້າທຸກຄົນທີ່ມີປະສົບການດັ່ງກ່າວກໍ່ຈະສາມາດຍ່າງທ່າມກາງຄຣິສຕະຈັກ ແລະ ລ້ຽງດູໃຫ້ອ້າຍເອື້ອຍນ້ອງຂອງພວກເຈົ້າ ເພື່ອວ່າພວກເຈົ້າແຕ່ລະຄົນຈະສາມາດດຶງເອົາຈຸດແຂງຂອງກັນ ແລະ ກັນ ເພື່ອທົດແທນຄວາມບົກຜ່ອງຂອງພວກເຈົ້າເອງ ແລະ ຮັບເອົາຄວາມຮູ້ທີ່ອຸດົມສົມບູນຍິ່ງຂຶ້ນໃນຈິດວິນຍານຂອງພວກເຈົ້າ. ຫຼັງຈາກທີ່ໄດ້ບັນລຸຜົນນີ້ແລ້ວ, ພວກເຈົ້າກໍ່ຈະສາມາດຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນໃນລະຫວ່າງການຮັບໃຊ້ຂອງພວກເຈົ້າ.

ຄົນທີ່ຮັບໃຊ້ພຣະເຈົ້າຄວນເປັນມິດສະຫາຍຂອງພຣະເຈົ້າ, ພວກເຂົາຄວນເປັນຄົນທີ່ພຣະເຈົ້າພໍໃຈ ແລະ ສາມາດຈົງຮັກພັກດີຕໍ່ພຣະເຈົ້າທີ່ສຸດ. ບໍ່ວ່າເຈົ້າຈະເຮັດເປັນການສ່ວນຕົວ ຫຼື ຕໍ່ໜ້າສາທາລະນະຊົນກໍ່ຕາມ, ເຈົ້າສາມາດຮັບຄວາມປິຕິຍິນດີຂອງພຣະເຈົ້າຕໍ່ໜ້າພຣະເຈົ້າໄດ້, ເຈົ້າສາມາດຍຶດໝັ້ນຕໍ່ໜ້າພຣະເຈົ້າ ແລະ ບໍ່ວ່າຄົນອື່ນຈະປະຕິບັດຕໍ່ເຈົ້າດ້ວຍວິທີໃດກໍ່ຕາມ ເຈົ້າຈະເດີນຕາມ

ເສັ້ນທາງທີ່ເຈົ້າຄວນຍ່າງຢູ່ສະເໝີ ແລະ ໃສ່ໃຈພາລະຂອງພຣະເຈົ້າຢ່າງຖີ່ຖ້ວນ. ມີພຽງຄົນແບບນີ້ເທົ່ານັ້ນຈຶ່ງເປັນມິດສະຫາຍຂອງພຣະເຈົ້າ. ການທີ່ມິດສະຫາຍຂອງພຣະເຈົ້າສາມາດຮັບໃຊ້ພຣະອົງໂດຍກົງກໍ່ເປັນເພາະວ່າພວກເຂົາໄດ້ຮັບການຝາກຝັງທີ່ຍິ່ງໃຫຍ່ຂອງພຣະເຈົ້າ ແລະ ພາລະຂອງພຣະເຈົ້າ, ພວກເຂົາສາມາດເຮັດໃຫ້ຫົວໃຈຂອງພຣະເຈົ້າເປັນຫົວໃຈຂອງພວກເຂົາເອງ ແລະ ຮັບເອົາພາລະຂອງພຣະເຈົ້າເປັນພາລະຂອງພວກເຂົາເອງ ແລະ ພວກເຂົາບໍ່ຄຳນຶງເຖິງໂອກາດໃນອະນາຄົດຂອງພວກເຂົາ: ເຖິງແມ່ນເມື່ອພວກເຂົາບໍ່ມີໂອກາດ ແລະ ພວກເຂົາຢືນຢັດໂດຍບໍ່ໄດ້ຮັບຫຍັງເລີຍ, ພວກເຂົາກໍ່ຈະເຊື່ອໃນພຣະເຈົ້າດ້ວຍຫົວໃຈທີ່ມີຄວາມຮັກຢູ່ສະເໝີ. ເພາະສະນັ້ນ, ຄົນປະເພດນີ້ແມ່ນມິດສະຫາຍຂອງພຣະເຈົ້າ. ມິດສະຫາຍຂອງພຣະເຈົ້າຍັງເປັນຄົນສະໜິດພຣະອົງ; ມີພຽງຄົນສະໜິດຂອງພຣະເຈົ້າເທົ່ານັ້ນທີ່ຈະສາມາດແບ່ງປັນຄວາມກະວົນກະວາຍຂອງພຣະອົງ ແລະ ຄວາມຄິດຂອງພຣະອົງໄດ້ ແລະ ເຖິງແມ່ນວ່າເນື້ອໜັງຂອງພວກເຂົາຈະເຈັບປວດ ແລະ ອ່ອນແອ, ພວກເຂົາກໍ່ສາມາດອົດທົນຕໍ່ຄວາມເຈັບປວດ ແລະ ປະຖິ້ມສິ່ງທີ່ພວກເຂົາຮັກເພື່ອເຮັດໃຫ້ພຣະເຈົ້າພໍໃຈ. ພຣະເຈົ້າມອບພາລະໃຫ້ກັບຜູ້ຄົນດັ່ງກ່າວຫຼາຍຂຶ້ນ ແລະ ສິ່ງທີ່ພຣະເຈົ້າປາຖະໜາຈະເຮັດແມ່ນປາກົດອອກໃນຄຳພະຍານຂອງຜູ້ຄົນດັ່ງກ່າວ. ສະນັ້ນ ຜູ້ຄົນເຫຼົ່ານີ້ຄືຄົນທີ່ພຣະເຈົ້າພໍໃຈ, ພວກເຂົາແມ່ນຄົນຮັບໃຊ້ພຣະເຈົ້າ ເຊິ່ງເປັນທີ່ພໍໃຈພຣະອົງເອງ ແລະ ມີພຽງຜູ້ຄົນແບບນີ້ເທົ່ານັ້ນຈຶ່ງສາມາດປົກຄອງຮ່ວມກັນກັບພຣະເຈົ້າໄດ້. ເວລາທີ່ເຈົ້າກາຍເປັນມິດສະຫາຍຂອງພຣະເຈົ້າຢ່າງແທ້ຈິງແມ່ນເວລາທີ່ເຈົ້າຈະໄດ້ປົກຄອງຮ່ວມກັບພຣະເຈົ້າຢ່າງແນ່ນອນ.

ພຣະເຢຊູສາມາດສຳເລັດການຝາກຝັງຂອງພຣະເຈົ້າ ນັ້ນກໍ່ຄື ພາລະກິດການໄຖ່ບາບມະນຸດຊາດທັງປວງ ຍ້ອນວ່າພຣະອົງເອົາໃຈໃສ່ຄວາມປະສົງຂອງພຣະເຈົ້າຢ່າງຖີ່ຖ້ວນ ໂດຍບໍ່ໄດ້ມີການວາງແຜນການ ຫຼື ການຈັດແຈງໃດໆສຳລັບພຣະອົງເອງ. ດັ່ງນັ້ນ ພຣະອົງກໍ່ຄືມິດສະຫາຍຂອງພຣະເຈົ້າເຊັ່ນກັນ ນັ້ນກໍ່ຄືພຣະອົງເອງ ເຊິ່ງເປັນສິ່ງທີ່ພວກເຈົ້າທຸກຄົນເຂົ້າໃຈເປັນຢ່າງດີຫຼາຍ. (ໃນຄວາມຈິງແລ້ວ, ພຣະອົງກໍ່ຄືພຣະເຈົ້າເອງທີ່ໄດ້ຖືກພຣະເຈົ້າເປັນພະຍານໃຫ້. ເຮົາເວົ້າເຖິງເລື່ອງນີ້ໃນທີ່ນີ້ເພື່ອໃຊ້ຂໍ້ແທ້ຈິງກ່ຽວກັບພຣະເຢຊູເພື່ອບັນລະຍາຍເຖິງບັນຫານີ້). ພຣະອົງສາມາດວາງແຜນການຄຸ້ມຄອງຂອງພຣະເຈົ້າໃສ່ສູນກາງແທ້ໆ ແລະ ອະທິຖານຫາພຣະບິດາທີ່ຢູ່ໃນສະຫວັນຢູ່ສະເໝີ ແລະ ສະແຫວງຫາຄວາມປະສົງຂອງພຣະບິດາທີ່ຢູ່ໃນສະຫວັນ. ພຣະອົງໄດ້ອະທິຖານ ແລະ ກ່າວວ່າ: "ພຣະເຈົ້າພຣະບິດາ! ຂໍໃຫ້ສຳເລັດຜົນຕາມຄວາມປະສົງຂອງພຣະອົງດ້ວຍ ແລະ ຢ່າໃຫ້ເປັນໄປຕາມຄວາມປະສົງຂອງຂ້ານ້ອຍເລີຍ ແຕ່ຂໍໃຫ້ເປັນໄປຕາມແຜນການຂອງພຣະອົງ. ມະນຸດອາດອ່ອນແອ, ແຕ່ເປັນຫຍັງພຣະອົງຈຶ່ງຕ້ອງເປັນຫ່ວງພວກເຂົາດ້ວຍ? ມະນຸດເຊິ່ງເປັນຄືກັບມົດໃນມືຂອງພຣະອົງຈະຄູ່ຄວນກັບຄວາມຫ່ວງໃຍຂອງພຣະອົງໄດ້ແນວໃດ? ໃນຫົວໃຈຂອງຂ້ານ້ອຍ, ຂ້ານ້ອຍພຽງແຕ່ປາຖະໜາທີ່ຈະໃຫ້ບັນລຸຕາມຄວາມປະສົງຂອງພຣະອົງເທົ່ານັ້ນ ແລະ ຂ້ານ້ອຍຂໍໃຫ້ພຣະອົງປະຕິບັດໃນຕົວຂ້ານ້ອຍຕາມຄວາມປາຖະໜາຂອງພຣະອົງເອງດ້ວຍ". ໃນການເດີນທາງໄປເມືອງເຢຣູຊາເລັມ, ພຣະເຢຊູຮູ້ສຶກເຈັບປວດເໝືອນດັ່ງກັບວ່າມີມີດມາສຽບແທງຫົວໃຈຂອງພຣະອົງ, ແຕ່ພຣະອົງກໍ່ບໍ່ເຄີຍມີເຈດຕະນາທີ່ຈະຄືນ

ຄຳເວົ້າຂອງພຣະອົງແມ່ນແຕ່ໜ້ອຍດຽວ; ມີພະລັງອຳນາດບາງຢ່າງທີ່ກະຕຸ້ນໃຫ້ພຣະອົງເດີນໜ້າໄປຫາບ່ອນທີ່ພຣະອົງຈະຖືກຄຶງໃສ່ເທິງໄມ້ກາງແຂນຢູ່ເລື້ອຍໆ. ໃນທີ່ສຸດ, ພຣະອົງກໍ່ຖືກຕອກຕະປູໃສ່ໄມ້ກາງແຂນ ແລະ ກາຍເປັນເໝືອນເນື້ອໜັງທີ່ເຕັມໄປດ້ວຍຄວາມບາບ, ສຳເລັດພາລະກິດແຫ່ງການໄຖ່ບາບຂອງມະນຸດຊາດ. ພຣະອົງໄດ້ເປັນອິດສະຫຼະຈາກໂສ້ເຫຼັກແຫ່ງຄວາມຕາຍ ແລະ ແດນມໍລະນາ. ຕໍ່ໜ້າພຣະອົງ, ຄວາມຕາຍ, ນະຮົກ ແລະ ແດນມໍລະນາໄດ້ໝົດອຳນາດຂອງພວກມັນ ແລະ ຖືກທຳລາຍໂດຍພຣະອົງ. ພຣະອົງມີຊີວິດຢູ່ໄດ້ສາມສິບສາມປີ ເຊິ່ງຕະຫຼອດໄລຍະເວລານັ້ນ ພຣະອົງໄດ້ປະຕິບັດສຸດຄວາມສາມາດຂອງພຣະອົງເພື່ອບັນລຸຕາມຄວາມປະສົງຂອງພຣະເຈົ້າ, ຕາມພາລະກິດຂອງພຣະເຈົ້າໃນເວລານັ້ນ ໂດຍພຣະອົງບໍ່ເຄີຍຄຳນຶງເຖິງຜົນໄດ້ ຫຼື ຜົນເສຍຂອງພຣະອົງເອງ ແລະ ມີແຕ່ຄິດເຖິງຄວາມປະສົງຂອງພຣະເຈົ້າພຣະບິດາຢູ່ສະເໝີ. ດັ່ງນັ້ນ, ຫຼັງຈາກທີ່ພຣະອົງໄດ້ຮັບບັບຕິດສະມາ, ພຣະເຈົ້າໄດ້ກ່າວວ່າ: "ນີ້ຄືບຸດຊາຍອັນເປັນທີ່ຮັກຂອງເຮົາ ທີ່ເຮົາເພິ່ງພໍໃຈທີ່ສຸດ". ຍ້ອນການຮັບໃຊ້ຂອງພຣະອົງຕໍ່ໜ້າພຣະເຈົ້າສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ, ພຣະເຈົ້າຈຶ່ງໄດ້ມອບພາລະອັນໜັກໜ່ວງໃນການໄຖ່ບາບໃຫ້ແກ່ມະນຸດຊາດທັງໝົດໄວ້ເທິງບ່າໄລ່ຂອງພຣະອົງ ແລະ ເຮັດໃຫ້ພຣະອົງປະຕິບັດມັນຈົນສຳເລັດ ແລະ ພຣະອົງມີຄຸນສົມບັດ ແລະ ມີສິດທີ່ຈະສຳເລັດໜ້າທີ່ສຳຄັນນີ້. ຕະຫຼອດຊີວິດຂອງພຣະອົງ, ພຣະອົງອົດທົນກັບການທົນທຸກທໍລະມານຈົນນັບບໍ່ຖ້ວນເພື່ອພຣະເຈົ້າ ແລະ ພຣະອົງໄດ້ຖືກຊາຕານລໍ້ລວງຈົນນັບບໍ່ຖ້ວນ, ແຕ່ພຣະອົງກໍບໍ່ເຄີຍທໍ້ໃຈ. ພຣະເຈົ້າມອບໜ້າທີ່ອັນໃຫຍ່ຫຼວງໃຫ້ກັບພຣະອົງ ເພາະພຣະເຈົ້າໄວ້ໃຈພຣະອົງ ແລະ ຮັກພຣະອົງ ແລະ ດ້ວຍເຫດນີ້, ພຣະເຈົ້າຈຶ່ງໄດ້ກ່າວດ້ວຍຕົນເອງວ່າ: "ນີ້ຄືບຸດຊາຍອັນເປັນທີ່ຮັກຂອງເຮົາ ທີ່ເຮົາເພິ່ງພໍໃຈທີ່ສຸດ". ໃນເວລານັ້ນ, ມີພຽງພຣະເຢຊູເທົ່ານັ້ນທີ່ສາມາດປະຕິບັດການຝາກຝັງນີ້ໃຫ້ສຳເລັດ ແລະ ນີ້ຄືລັກສະນະຕົວຈິງໜຶ່ງຢ່າງທີ່ພຣະເຈົ້າສຳເລັດພາລະກິດຂອງພຣະອົງໃນການໄຖ່ບາບມະນຸດຊາດທັງໝົດໃນຍຸກແຫ່ງພຣະຄຸນ.

ຖ້າພວກເຈົ້າສາມາດເອົາໃຈໃສ່ພາລະຂອງພຣະເຈົ້າຢ່າງຖີ່ຖ້ວນຄືກັບພຣະເຢຊູ ແລະ ຫັນຫຼັງໃຫ້ກັບເນື້ອໜັງຂອງພວກເຈົ້າ, ພຣະເຈົ້າຈະມອບໝາຍໜ້າວຽກທີ່ສຳຄັນຂອງພຣະອົງໃຫ້ແກ່ພວກເຈົ້າເພື່ອວ່າພວກເຈົ້າຈະບັນລຸເງື່ອນໄຂທີ່ຈຳເປັນໃນການຮັບໃຊ້ພຣະເຈົ້າ. ມີແຕ່ພາຍໃຕ້ສະຖານະການດັ່ງກ່າວເທົ່ານັ້ນ, ພວກເຈົ້າຈຶ່ງຈະກ້າເວົ້າວ່າພວກເຈົ້າກຳລັງປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ເຮັດການຝາກຝັງຂອງພຣະອົງຈົນສຳເລັດ ແລະ ເມື່ອນັ້ນເອງ ພວກເຈົ້າຈຶ່ງຈະກ້າເວົ້າວ່າ ພວກເຈົ້າກຳລັງຮັບໃຊ້ພຣະເຈົ້າຢ່າງແທ້ຈິງ. ເມື່ອສົມທຽບໃສ່ຕົວຢ່າງຂອງພຣະເຢຊູແລ້ວ, ເຈົ້າກ້າເວົ້າວ່າເຈົ້າເປັນມິດສະຫາຍຂອງພຣະເຈົ້າບໍ? ເຈົ້າກ້າເວົ້າວ່າເຈົ້າກຳລັງເຮັດຕາມຄວາມປະສົງຂອງພຣະເຈົ້າບໍ? ເຈົ້າກ້າເວົ້າວ່າ ເຈົ້າກຳລັງຮັບໃຊ້ພຣະເຈົ້າຢ່າງແທ້ຈິງບໍ? ມື້ນີ້ ເຈົ້າບໍ່ເຂົ້າໃຈວິທີການຮັບໃຊ້ພຣະເຈົ້າ, ເຈົ້າກ້າເວົ້າວ່າເຈົ້າເປັນມິດສະຫາຍຂອງພຣະເຈົ້າບໍ? ຖ້າເຈົ້າເວົ້າວ່າເຈົ້າຮັບໃຊ້ພຣະເຈົ້າ, ເຈົ້າຈະບໍ່ໝິ່ນປະໝາດພຣະອົງບໍ? ໃຫ້ຄິດກ່ຽວກັບມັນເບິ່ງ: ເຈົ້າກຳລັງຮັບໃຊ້ພຣະເຈົ້າ ຫຼື ຕົວເຈົ້າເອງ? ເຈົ້າຮັບໃຊ້ຊາຕານ, ແຕ່ເຈົ້າເວົ້າຢ່າງດື້ດ້ານວ່າ ເຈົ້າກຳລັງຮັບໃຊ້ພຣະເຈົ້າ ເຊິ່ງໃນສິ່ງນີ້ແລ້ວ ເຈົ້າບໍ່ໄດ້ໝິ່ນປະໝາດພຣະເຈົ້າບໍ? ຫຼາຍຄົນທີ່ຢູ່ລັບຫຼັງເຮົາປາຖະໜາຢາກໄດ້ຜົນປະໂຫຍດຈາກສະຖານະ, ພວກເຂົາ

ໃສ່ໃຈຕົນເອງແຕ່ເລື່ອງອາຫານ, ພວກເຂົາມັກການຫຼັບນອນ ແລະ ເອົາໃຈໃສ່ກັບເນື້ອໜັງຢ່າງຖີ່ຖ້ວນ, ຢ້ານຢູ່ສະເໝີວ່າຈະບໍ່ມີທາງອອກສຳລັບເນື້ອໜັງໄດ້. ພວກເຂົາບໍ່ປະຕິບັດໜ້າທີ່ທີ່ຖືກຕ້ອງຂອງພວກເຂົາໃນຄຣິສຕະຈັກ ແລະ ໄປຄຣິສະຕະຈັກເພື່ອກິນຂອງຟຣີ ຫຼື ຖ້າບໍ່ດັ່ງນັ້ນ ພວກເຂົາກໍ່ຕັກເຕືອນອ້າຍເອື້ອຍນ້ອງຂອງພວກເຂົາດ້ວຍພຣະທຳຂອງເຮົາ, ສະແດງເປັນເຈົ້າເປັນນາຍບົງການຄົນອື່ນຈາກຕຳແໜ່ງທີ່ມີມີສິດອຳນາດ. ຜູ້ຄົນເຫຼົ່ານີ້ມັກເວົ້າວ່າພວກເຂົາປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ເວົ້າຢູ່ສະເໝີວ່າພວກເຂົາຄືມິດສະຫາຍຂອງພຣະເຈົ້າ, ແລ້ວນີ້ບໍ່ແມ່ນເລື່ອງໄຮ້ສາລະບໍ? ຖ້າເຈົ້າມີເຈດຕະນາທີ່ຖືກຕ້ອງ ແຕ່ບໍ່ສາມາດຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າ, ແລ້ວເຈົ້າກໍ່ກຳລັງເປັນຄົນທີ່ໂງ່ຈ້າ; ແຕ່ຖ້າເຈດຕະນາຂອງເຈົ້າບໍ່ຖືກຕ້ອງ ແລະ ເຈົ້າຍັງບອກວ່າເຈົ້າຮັບໃຊ້ພຣະເຈົ້າ, ແລ້ວເຈົ້າກໍ່ເປັນຄົນທີ່ຕໍ່ຕ້ານພຣະເຈົ້າ ແລະ ເຈົ້າຄວນຖືກພຣະເຈົ້າລົງໂທດ! ເຮົາບໍ່ມີຄວາມເມດຕາສຳລັບຜູ້ຄົນດັ່ງກ່າວ! ໃນເຮືອນຂອງພຣະເຈົ້າ, ພວກເຂົາເອົາປຽບຄົນອື່ນ, ຫຼົງໄຫຼກັບຄວາມສຸກສະບາຍທາງເນື້ອໜັງຢູ່ສະເໝີ ແລະ ບໍ່ເຄີຍຄຳນຶງເຖິງຜົນປະໂຫຍດຂອງພຣະເຈົ້າ. ພວກເຂົາມີແຕ່ສະແຫວງຫາສິ່ງທີ່ດີສຳລັບພວກເຂົາຢູ່ສະເໝີ ແລະ ພວກເຂົາບໍ່ເຄີຍໃສ່ໃຈຄວາມປະສົງຂອງພຣະເຈົ້າເລີຍ. ພວກເຂົາບໍ່ຍອມຮັບການກວດສອບຂອງພຣະວິນຍານຂອງພຣະເຈົ້າໃນສິ່ງໃດກໍ່ຕາມທີ່ພວກເຂົາເຮັດ. ພວກເຂົາວາງແຜນ ແລະ ຫຼອກລວງອ້າຍເອື້ອຍນ້ອງຂອງພວກເຂົາຢູ່ສະເໝີ ແລະ ເປັນຄົນສອງໜ້າຄືກັບໝາຈອກໃນສວນອະງຸ່ນທີ່ລັກກິນໝາກອະງຸ່ນ ແລະ ຢຽບຢໍ່າສວນອະງຸ່ນຢູ່ສະເໝີ. ຜູ້ຄົນດັ່ງກ່າວຈະສາມາດເປັນມິດສະຫາຍຂອງພຣະເຈົ້າໄດ້ບໍ? ເຈົ້າເໝາະສົມທີ່ຈະໄດ້ຮັບພອນຈາກພຣະເຈົ້າບໍ? ເຈົ້າບໍ່ແບກຮັບພາລະສຳລັບຊີວິດຂອງເຈົ້າ ແລະ ຄຣິສຕະຈັກ, ເຈົ້າເໝາະສົມທີ່ຈະຮັບເອົາການຝາກຝັງຂອງພຣະເຈົ້າບໍ? ຜູ້ໃດຈະກ້າໄວ້ວາງໃຈຄົນຄືເຈົ້າ? ເມື່ອເຈົ້າຮັບໃຊ້ແບບນີ້, ພຣະເຈົ້າຈະມອບໝາຍໜ້າວຽກທີ່ຍິ່ງໃຫຍ່ໃຫ້ກັບເຈົ້າໄດ້ບໍ? ສິ່ງນີ້ຈະບໍ່ເຮັດໃຫ້ພາລະກິດເກີດການຊັກຊ້າບໍ?

ເຮົາເວົ້າແບບນີ້ເພື່ອວ່າພວກເຈົ້າອາດຈະຮູ້ວ່າມີເງື່ອນໄຂຫຍັງແດ່ທີ່ຕ້ອງປະຕິບັດຕາມເພື່ອຮັບໃຊ້ໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ຖ້າພວກເຈົ້າບໍ່ມອບຫົວໃຈຂອງພວກເຈົ້າໃຫ້ກັບພຣະເຈົ້າ, ຖ້າພວກເຈົ້າບໍ່ເອົາໃຈໃສ່ຕໍ່ຄວາມປະສົງຂອງພຣະເຈົ້າຢ່າງຖີ່ຖ້ວນເໝືອນດັ່ງພຣະເຢຊູ, ແລ້ວພວກເຈົ້າກໍ່ບໍ່ສາມາດເປັນຄົນທີ່ພຣະເຈົ້າໄວ້ວາງໃຈໄດ້ ແລະ ໃນທ້າຍທີ່ສຸດແລ້ວກໍ່ຈະຖືກພິພາກສາໂດຍພຣະເຈົ້າ. ບາງເທື່ອໃນມື້ນີ້, ໃນການຮັບໃຊ້ພຣະເຈົ້າຂອງເຈົ້າ, ເຈົ້າມີເຈດຕະນາເພື່ອຫຼອກລວງພຣະເຈົ້າຢູ່ສະເໝີ ແລະ ພົວພັນກັບພຣະອົງພໍເປັນພິທີຢູ່ສະເໝີ. ສະຫຼຸບຄື ບໍ່ວ່າຫຍັງກໍ່ຕາມ, ຖ້າເຈົ້າຫຼອກລວງພຣະເຈົ້າ, ການພິພາກສາທີ່ໄຮ້ປານີຈະມາຫາເຈົ້າ. ພວກເຈົ້າຄວນໃຊ້ປະໂຫຍດຈາກການຫາກໍ່ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການຮັບໃຊ້ພຣະເຈົ້າເພື່ອມອບຫົວໃຈຂອງພວກເຈົ້າໃຫ້ກັບພຣະອົງກ່ອນ ໂດຍບໍ່ຕ້ອງມີຄວາມຈົງຮັກພັກດີທີ່ເດັດດ່ຽວ. ບໍ່ວ່າເຈົ້າຈະຢູ່ຕໍ່ໜ້າພຣະເຈົ້າ ຫຼື ຕໍ່ໜ້າຄົນອື່ນໆ, ຫົວໃຈຂອງເຈົ້າຄວນຫັນເຂົ້າຫາພຣະເຈົ້າຢູ່ສະເໝີ ແລະ ເຈົ້າຄວນເດັດດ່ຽວທີ່ຈະຮັກພຣະເຈົ້າເໝືອນດັ່ງພຣະເຢຊູ. ໃນວິທີນີ້ເທົ່ານັ້ນ, ພຣະເຈົ້າຈຶ່ງຈະເຮັດໃຫ້ເຈົ້າສົມບູນ, ເພື່ອວ່າເຈົ້າຈະໄດ້ກາຍເປັນຄົນຮັບໃຊ້ພຣະເຈົ້າເຊິ່ງເປັນທີ່ພໍໃຈຂອງພຣະອົງ. ຖ້າເຈົ້າປາຖະໜາທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າຢ່າງແທ້ຈິງ ແລະ

ເພື່ອໃຫ້ການຮັບໃຊ້ຂອງເຈົ້າສອດຄ່ອງກັບຄວາມປະສົງຂອງພຣະອົງ, ແລ້ວເຈົ້າຄວນປ່ຽນທັດສະນະກ່ອນໜ້ານັ້ນຂອງເຈົ້າກ່ຽວກັບຄວາມເຊື່ອໃນພຣະເຈົ້າ ແລະ ປ່ຽນວິທີທາງເດີມທີ່ເຈົ້າເຄີຍໃຊ້ເພື່ອຮັບໃຊ້ພຣະເຈົ້າ ເພື່ອວ່າຈະມີພວກເຈົ້າອີກຫຼາຍຄົນທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ດ້ວຍວິທີນີ້, ພຣະເຈົ້າຈະບໍ່ປະຖິ້ມເຈົ້າ ແລະ ເໝືອນເປໂຕ ເຈົ້າຈະຖືກຈັດຢູ່ແຖວໜ້າຂອງຄົນທີ່ຮັກພຣະເຈົ້າ. ຖ້າເຈົ້າຍັງບໍ່ຍອມກັບໃຈ, ເຈົ້າຈະພົບຈຸດຈົບເໝືອນດັ່ງຢູດາ. ທຸກຄົນທີ່ເຊື່ອພຣະເຈົ້າຄວນເຂົ້າໃຈໃນສິ່ງນີ້.

# ວິທີການຮູ້ຈັກຄວາມເປັນຈິງ

ພຣະເຈົ້າແມ່ນພຣະເຈົ້າຕາມຄວາມເປັນຈິງ ນັ້ນກໍຄື ພາລະກິດທຸກຢ່າງຂອງພຣະອົງແມ່ນຕາມຄວາມເປັນຈິງ, ພຣະທຳທຸກຂໍ້ທີ່ພຣະອົງກ່າວອອກມາແມ່ນຕາມຄວາມເປັນຈິງ ແລະ ຄວາມຈິງທຸກປະການທີ່ພຣະອົງສຳແດງອອກກໍແມ່ນຕາມຄວາມເປັນຈິງ. ທຸກສິ່ງທີ່ບໍ່ແມ່ນພຣະທຳຂອງພຣະອົງເປັນສິ່ງທີ່ບໍ່ມີຄວາມໝາຍ, ບໍ່ມີຕົວຕົນ ແລະ ເຊື່ອຖືບໍ່ໄດ້. ໃນປັດຈຸບັນ, ພຣະວິນຍານບໍລິສຸດຕ້ອງນຳພາຜູ້ຄົນເຂົ້າສູ່ພຣະທຳຂອງພຣະເຈົ້າ. ຖ້າຜູ້ຄົນຕ້ອງສະແຫວງຫາທາງເຂົ້າສູ່ຄວາມເປັນຈິງ ພວກເຂົາຕ້ອງຄົ້ນຫາຄວາມເປັນຈິງ ແລະ ຮູ້ຈັກຄວາມເປັນຈິງ, ຫຼັງຈາກນັ້ນ ພວກເຂົາຕ້ອງມີປະສົບການກັບຄວາມເປັນຈິງ ແລະ ດຳລົງຊີວິດຕາມຄວາມເປັນຈິງ. ຍິ່ງຜູ້ຄົນຮູ້ຈັກຄວາມເປັນຈິງຫຼາຍສໍ່າໃດ ພວກເຂົາກໍຍິ່ງສາມາດແຍກແຍະໄດ້ວ່າຄຳເວົ້າຂອງຄົນອື່ນເປັນຈິງ ຫຼື ບໍ່; ຍິ່ງຜູ້ຄົນຮູ້ຈັກຄວາມເປັນຈິງຫຼາຍສໍ່າໃດ ພວກເຂົາກໍຍິ່ງຈະມີແນວຄິດໜ້ອຍລົງສໍ່ານັ້ນ; ຍິ່ງຜູ້ຄົນມີປະສົບການກັບຄວາມເປັນຈິງຫຼາຍສໍ່າໃດ ພວກເຂົາກໍຍິ່ງຈະຮູ້ຈັກການກະທຳຂອງພຣະເຈົ້າໃນຄວາມເປັນຈິງຫຼາຍສໍ່ານັ້ນ ແລະ ມັນຍິ່ງງ່າຍຂຶ້ນທີ່ຈະໃຫ້ພວກເຂົາເປັນອິດສະຫຼະຈາກອຸປະນິໄສທີ່ເສື່ອມຊາມຂອງພວກເຂົາ; ຍິ່ງຜູ້ຄົນມີຄວາມຈິງຫຼາຍສໍ່າໃດ ພວກເຂົາກໍຍິ່ງຮູ້ຈັກພຣະເຈົ້າຫຼາຍສໍ່ານັ້ນ ແລະ ພວກເຂົາກໍຍິ່ງກຽດຊັງຝ່າຍເນື້ອໜັງ ແລະ ຮັກຄວາມຈິງຫຼາຍສໍ່ານັ້ນ; ແລະ ຍິ່ງພວກເຂົາມີຄວາມເປັນຈິງຫຼາຍສໍ່າໃດ ພວກເຂົາກໍຍິ່ງເຂົ້າໃກ້ມາດຕະຖານແຫ່ງເງື່ອນໄຂທີ່ຈຳເປັນຂອງພຣະເຈົ້າຫຼາຍສໍ່ານັ້ນ. ຜູ້ຄົນທີ່ຖືກພຣະເຈົ້າຮັບເອົາແມ່ນຄົນທີ່ປະກອບດ້ວຍຄວາມຈິງ, ຮູ້ຈັກຄວາມເປັນຈິງ ແລະ ໄດ້ຮຽນຮູ້ຈັກການກະທຳທີ່ແທ້ຈິງຂອງພຣະເຈົ້າຜ່ານປະສົບການກັບຄວາມເປັນຈິງ. ຍິ່ງເຈົ້າຮ່ວມມືກັບພຣະເຈົ້າໃນລັກສະນະທີ່ເປັນຈິງ ແລະ ລົງວິໄນຮ່າງກາຍຂອງເຈົ້າຫຼາຍສໍ່າໃດ ເຈົ້າກໍຍິ່ງຈະໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດຫຼາຍສໍ່ານັ້ນ, ເຈົ້າຈະໄດ້ຮັບຄວາມເປັນຈິງຫຼາຍສໍ່ານັ້ນ ແລະ ເຈົ້າຍິ່ງຈະຖືກພຣະເຈົ້າເຮັດໃຫ້ສະຫວ່າງຫຼາຍສໍ່ານັ້ນ ແລະ ດ້ວຍເຫດນັ້ນ ຄວາມຮູ້ຂອງເຈົ້າກ່ຽວກັບການກະທຳທີ່ເປັນຈິງຂອງພຣະເຈົ້າກໍຈະຍິ່ງມີຫຼາຍສໍ່ານັ້ນ. ຖ້າເຈົ້າສາມາດດຳລົງຊີວິດໃນແສງສະຫວ່າງແຫ່ງປັດຈຸບັນຂອງພຣະວິນຍານບໍລິສຸດ ແລ້ວເສັ້ນທາງສູ່ການປະຕິບັດຂອງເຈົ້າໃນປັດຈຸບັນກໍຈະຊັດເຈນຂຶ້ນສຳລັບເຈົ້າ ແລະ ເຈົ້າກໍຈະສາມາດແຍກຕົວເອງອອກຈາກແນວຄິດທາງສາສະໜາ ແລະ ການປະຕິບັດທີ່ເກົ່າແກ່ຈາກອະດີດໄດ້ຫຼາຍຂຶ້ນ. ໃນປັດຈຸບັນ ຄວາມເປັນຈິງແມ່ນສຸມໃສ່ສິ່ງນີ້: ຍິ່ງຜູ້ຄົນມີຄວາມເປັນຈິງຫຼາຍສໍ່າໃດ ຄວາມຮູ້ກ່ຽວກັບຄວາມຈິງຂອງພວກເຂົາກໍຈະຊັດເຈນຫຼາຍສໍ່ານັ້ນ ແລະ ຄວາມເຂົ້າໃຈກ່ຽວກັບຄວາມປະສົງຂອງພຣະເຈົ້າກໍຈະຍິ່ງໃຫຍ່ຫຼາຍສໍ່ານັ້ນ. ຄວາມເປັນຈິງສາມາດເອົາຊະນະຕົວອັກສອນ ແລະ ຄຳສັ່ງສອນທຸກຢ່າງ, ມັນສາມາດເອົາຊະນະທິດສະດີ ແລະ ຄວາມຊຳນານທັງໝົດ ແລະ ຍິ່ງຜູ້ຄົນເອົາໃຈໃສ່ຄວາມເປັນຈິງຫຼາຍສໍ່າໃດ, ພວກເຂົາກໍຍິ່ງຮັກພຣະເຈົ້າຢ່າງແທ້ຈິງ, ຫິວ ແລະ ກະຫາຍຫາພຣະທຳຂອງພຣະອົງຫຼາຍສໍ່ານັ້ນ. ຖ້າເຈົ້າເອົາໃຈໃສ່ຄວາມເປັນຈິງ, ແລ້ວປັດຊະຍາສຳລັບການດຳລົງຊີວິດຂອງເຈົ້າ, ແນວຄິດທາງສາສະໜາ ແລະ ລັກສະນະທາງທຳມະຊາດຈະຖືກລຶບອອກໂດຍທຳມະຊາດຫຼັງຈາກຜ່ານ

ພາລະກິດຂອງພຣະເຈົ້າ. ຄົນທີ່ບໍ່ສະແຫວງຫາຄວາມເປັນຈິງ ແລະ ບໍ່ມີຄວາມຮູ້ກ່ຽວກັບຄວາມເປັນຈິງ ມັກຈະສະແຫວງຫາສິ່ງທີ່ເໜືອທຳມະຊາດ ແລະ ພວກເຂົາກໍຈະຖືກຫຼອກລວງໄດ້ງ່າຍ. ພຣະວິນຍານບໍລິສຸດບໍ່ມີທາງປະຕິບັດພາລະກິດໃນຄົນປະເພດດັ່ງກ່າວ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຮູ້ສຶກວ່າງເປົ່າ ແລະ ຊີວິດຂອງພວກເຂົາກໍຈະບໍ່ມີຄວາມໝາຍຫຍັງເລີຍ.

ພຣະວິນຍານບໍລິສຸດພຽງແຕ່ສາມາດປະຕິບັດພາລະກິດໃນຕົວເຈົ້າ ເມື່ອເຈົ້າຝຶກຝົນຢ່າງແທ້ຈິງ, ຄົ້ນຫາຢ່າງແທ້ຈິງ, ອະທິຖານຢ່າງແທ້ຈິງ ແລະ ເຕັມໃຈທີ່ຈະທົນທຸກໂດຍເຫັນແກ່ການສະແຫວງຫາຄວາມຈິງ. ຄົນທີ່ບໍ່ສະແຫວງຫາຄວາມຈິງບໍ່ມີຫຍັງເລີຍ ນອກຈາກຕົວອັກສອນ ແລະ ຄຳສັ່ງສອນ ແລະ ທິດສະດີທີ່ວ່າງເປົ່າ ແລະ ຄົນທີ່ປາສະຈາກຄວາມຈິງກໍຈະມີແນວຄິດຫຼາຍຢ່າງກ່ຽວກັບພຣະເຈົ້າໂດຍທຳມະຊາດ. ຄົນປະເພດນີ້ປາຖະໜາພຽງແຕ່ໃຫ້ພຣະເຈົ້າປ່ຽນຮ່າງກາຍຝ່າຍເນື້ອໜັງຂອງພວກເຂົາໃຫ້ເປັນຮ່າງກາຍຝ່າຍວິນຍານເທົ່ານັ້ນ ເພື່ອພວກເຂົາຈະໄດ້ຂຶ້ນສູ່ສະຫວັນຊັ້ນທີສາມ. ຜູ້ຄົນເຫຼົ່ານີ້ຊ່າງໂງ່ຈ້າແທ້ໆ! ທຸກຄົນທີ່ເວົ້າສິ່ງດັ່ງກ່າວບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າ ຫຼື ກ່ຽວກັບຄວາມເປັນຈິງ; ຜູ້ຄົນປະເພດນີ້ບໍ່ມີທາງສາມາດຮ່ວມມືກັບພຣະເຈົ້າໄດ້ ແລະ ພຽງແຕ່ສາມາດລໍຖ້າຢູ່ຊື່ໆ. ຖ້າຜູ້ຄົນຕ້ອງເຂົ້າໃຈຄວາມຈິງ ແລະ ເຫັນຄວາມຈິງຢ່າງຊັດເຈນ ແລະ ຍິ່ງໄປກວ່ານັ້ນ ຖ້າພວກເຂົາຕ້ອງເຂົ້າສູ່ຄວາມຈິງ ແລະ ນຳເຂົ້າສູ່ການປະຕິບັດ, ແລ້ວພວກເຂົາກໍຕ້ອງຝຶກຝົນຢ່າງແທ້ຈິງ, ຄົ້ນຫາຢ່າງແທ້ຈິງ ແລະ ຫິວ ແລະ ກະຫາຍຢ່າງແທ້ຈິງ. ເມື່ອເຈົ້າຫິວ ແລະ ກະຫາຍ ແລະ ເມື່ອເຈົ້າຮ່ວມມືກັບພຣະເຈົ້າຢ່າງແທ້ຈິງ, ພຣະວິນຍານຂອງພຣະເຈົ້າຈະສຳຜັດເຈົ້າຢ່າງແນ່ນອນ ແລະ ປະຕິບັດພາລະກິດພາຍໃນຕົວເຈົ້າ ເຊິ່ງຈະນຳແສງສະຫວ່າງມາສູ່ຕົວເຈົ້າຫຼາຍຂຶ້ນ, ມອບຄວາມຮູ້ກ່ຽວກັບຄວາມຈິງໃຫ້ກັບເຈົ້າຫຼາຍຂຶ້ນ ແລະ ໃຫ້ການຊ່ວຍເຫຼືອກັບຊີວິດຂອງເຈົ້າຫຼາຍຍິ່ງຂຶ້ນ.

ຖ້າຜູ້ຄົນຕ້ອງຮູ້ຈັກພຣະເຈົ້າ ພວກເຂົາຕ້ອງຮູ້ຈັກວ່າພຣະເຈົ້າແມ່ນພຣະເຈົ້າຕາມຄວາມເປັນຈິງກ່ອນ ແລະ ພວກເຂົາຕ້ອງຮູ້ຈັກພຣະທຳຂອງພຣະເຈົ້າ, ການປາກົດກາຍຂອງພຣະເຈົ້າໃນເນື້ອໜັງ ແລະ ພາລະກິດຕາມຄວາມເປັນຈິງຂອງພຣະເຈົ້າ. ພຽງແຕ່ຫຼັງຈາກການຮູ້ຈັກວ່າ ພາລະກິດທຸກຢ່າງຂອງພຣະເຈົ້າແມ່ນຕາມຄວາມເປັນຈິງເທົ່ານັ້ນ ເຈົ້າຈຶ່ງຈະສາມາດຮ່ວມມືກັບພຣະເຈົ້າຢ່າງແທ້ຈິງໄດ້ ແລະ ພຽງແຕ່ຜ່ານເສັ້ນທາງນີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດບັນລຸຄວາມເຕີບໃຫຍ່ໃນຊີວິດຂອງເຈົ້າໄດ້. ທຸກຄົນທີ່ບໍ່ມີຄວາມຮູ້ກ່ຽວກັບຄວາມເປັນຈິງບໍ່ມີທາງຈະມີປະສົບການກັບພຣະທຳຂອງພຣະເຈົ້າໄດ້, ຕິດບ້ວງແຮ້ວໃນແນວຄິດຂອງພວກເຂົາ, ດຳລົງຊີວິດຢູ່ໃນຈິນຕະນາການຂອງພວກເຂົາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ມີຄວາມຮູ້ກ່ຽວກັບພຣະທຳຂອງພຣະເຈົ້າ. ຍິ່ງຄວາມຮູ້ຂອງເຈົ້າກ່ຽວກັບຄວາມເປັນຈິງຍິ່ງໃຫຍ່ສໍ່າໃດ ເຈົ້າກໍຍິ່ງໃກ້ກັບພຣະເຈົ້າຫຼາຍສໍ່ານັ້ນ ແລະ ເຈົ້າກໍຍິ່ງໃກ້ຊິດກັບພຣະອົງຫຼາຍສໍ່ານັ້ນ; ຍິ່ງເຈົ້າສະແຫວງຫາຄວາມບໍ່ແຈ່ມແຈ້ງ, ຄວາມບໍ່ມີຕົວຕົນ ແລະ ຄຳສັ່ງສອນຫຼາຍສໍ່າໃດ, ເຈົ້າກໍຍິ່ງຫ່າງເຫີນຈາກພຣະເຈົ້າສໍ່ານັ້ນ ແລະ ດ້ວຍເຫດນັ້ນ ເຈົ້າກໍຍິ່ງຈະຮູ້ສຶກວ່າ ການມີປະສົບການກັບພຣະທຳຂອງພຣະເຈົ້າເປັນສິ່ງທີ່ລຳບາກ ແລະ ຫຍຸ້ງຍາກຫຼາຍສໍ່ານັ້ນ ແລະ ເຈົ້າກໍຍັງຮູ້ສຶກວ່າເຈົ້າຂາດຄວາມສາມາດສຳລັບທາງເຂົ້າສູ່ພຣະທຳ. ຖ້າເຈົ້າປາຖະໜາທີ່ຈະເຂົ້າສູ່ຄວາມເປັນຈິງແຫ່ງ

ພຣະທຳຂອງພຣະເຈົ້າ ແລະ ສູ່ເສັ້ນທາງທີ່ຖືກຕ້ອງຂອງຊີວິດຝ່າຍວິນຍານຂອງເຈົ້າ, ເຈົ້າຕ້ອງຮູ້ຈັກຄວາມເປັນຈິງກ່ອນ ແລະ ແຍກຕົວເຈົ້າເອງອອກຈາກສິ່ງທີ່ບໍ່ແຈ່ມແຈ້ງ ແລະ ເໜືອທຳມະຊາດ ເຊິ່ງເວົ້າໄດ້ວ່າ ກ່ອນອື່ນ ເຈົ້າຕ້ອງເຂົ້າໃຈວ່າ ພຣະວິນຍານບໍລິສຸດເຮັດໃຫ້ສະຫວ່າງຢ່າງແທ້ຈິງ ແລະ ນຳພາເຈົ້າຈາກພາຍໃນໄດ້ແນວໃດ. ດ້ວຍວິທີນີ້ ຖ້າເຈົ້າສາມາດເຂົ້າໃຈພາລະກິດທີ່ແທ້ຈິງຂອງພຣະວິນຍານບໍລິສຸດພາຍໃນມະນຸດຢ່າງແທ້ຈິງ, ແລ້ວເຈົ້າກໍຈະໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການຖືກພຣະເຈົ້າເຮັດໃຫ້ສົມບູນຢ່າງແນ່ນອນ.

ໃນປັດຈຸບັນ ທຸກສິ່ງເລີ່ມຕົ້ນຈາກຄວາມເປັນຈິງ. ພາລະກິດຂອງພຣະເຈົ້າເປັນສິ່ງທີ່ເປັນຈິງທີ່ສຸດ ແລະ ຜູ້ຄົນກໍສາມາດສຳຜັດໄດ້; ມັນເປັນສິ່ງທີ່ຜູ້ຄົນສາມາດປະສົບ ແລະ ບັນລຸໄດ້. ໃນຜູ້ຄົນ ມີຫຼາຍສິ່ງທີ່ບໍ່ແຈ່ມແຈ້ງ ແລະ ເໜືອທຳມະຊາດ ເຊິ່ງຢຸດພວກເຂົາຈາກການຮູ້ຈັກພາລະກິດໃນປັດຈຸບັນຂອງພຣະເຈົ້າ. ສະນັ້ນ ໃນປະສົບການຂອງພວກເຂົາ, ພວກເຂົາອອກນອກທິດນອກທາງຢູ່ສະເໝີ ແລະ ຮູ້ສຶກວ່າສິ່ງຕ່າງໆຍາກຢູ່ສະເໝີ ແລະ ນີ້ລ້ວນແລ້ວແຕ່ເກີດຂຶ້ນຈາກແນວຄິດຂອງພວກເຂົາ. ຜູ້ຄົນບໍ່ສາມາດເຂົ້າໃຈຫຼັກການແຫ່ງພາລະກິດຂອງພຣະວິນຍານບໍລິສຸດ, ພວກເຂົາບໍ່ຮູ້ຈັກຄວາມເປັນຈິງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງມີຄວາມຄິດລົບໃນເສັ້ນທາງເຂົ້າສູ່ຂອງພວກເຂົາຢູ່ສະເໝີ. ພວກເຂົາເບິ່ງເງື່ອນໄຂຈຳເປັນຂອງພຣະເຈົ້າຈາກທາງໄກ ໂດຍບໍ່ສາມາດບັນລຸສິ່ງເຫຼົ່ານັ້ນໄດ້; ພວກເຂົາພຽງແຕ່ເຫັນວ່າ ພຣະທຳຂອງພຣະເຈົ້າດີແທ້ ແຕ່ບໍ່ສາມາດຄົ້ນພົບເສັ້ນທາງເຂົ້າຫາໄດ້ເລີຍ. ພຣະວິນຍານບໍລິສຸດປະຕິບັດພາລະກິດດ້ວຍຫຼັກການນີ້: ຜ່ານການຮ່ວມມືຂອງຜູ້ຄົນ, ຜ່ານການອະທິຖານຢ່າງຫ້າວຫັນຂອງພວກເຂົາ, ຜ່ານການຄົ້ນຫາ ແລະ ການຫຍັບເຂົ້າໃກ້ພຣະເຈົ້າຫຼາຍຂຶ້ນ ເຊິ່ງຖ້າສາມາດບັນລຸຜົນສິ່ງນີ້ໄດ້ ພວກເຂົາກໍຈະໄດ້ຮັບການເຮັດໃຫ້ສະຫວ່າງ ແລະ ແສງເຍື່ອງທາງຈາກພຣະວິນຍານບໍລິສຸດ. ມັນບໍ່ແມ່ນເລື່ອງທີ່ພຣະວິນຍານບໍລິສຸດກະທຳແຕ່ຝ່າຍດຽວ ຫຼື ມະນຸດກະທຳແຕ່ຝ່າຍດຽວ. ທັງສອງຝ່າຍຈຳເປັນຢ່າງຍິ່ງ ແລະ ຍິ່ງຜູ້ຄົນຮ່ວມມືກັນຫຼາຍສໍ່າໃດ ແລະ ຍິ່ງພວກເຂົາສະແຫວງຫາເພື່ອເຂົ້າເຖິງມາດຕະຖານແຫ່ງເງື່ອນໄຂຈຳເປັນຂອງພຣະເຈົ້າຫຼາຍສໍ່າໃດ ພາລະກິດຂອງພຣະວິນຍານບໍລິສຸດກໍຍິ່ງໃຫຍ່ຫຼາຍສໍ່ານັ້ນ. ມີພຽງແຕ່ການຮ່ວມມືທີ່ແທ້ຈິງຂອງຜູ້ຄົນເທົ່ານັ້ນ ບວກກັບພາລະກິດຂອງພຣະວິນຍານບໍລິສຸດ ຈຶ່ງສາມາດກໍ່ໃຫ້ເກີດປະສົບການທີ່ແທ້ຈິງ ແລະ ຄວາມຮູ້ທີ່ເປັນແກ່ນແທ້ກ່ຽວກັບພຣະທຳຂອງພຣະເຈົ້າ. ຜ່ານປະສົບການໃນລັກສະນະນີ້ເທື່ອລະເລັກເທື່ອນ້ອຍກໍຈະເກີດມີບຸກຄົນສົມບູນໃນທີ່ສຸດ. ພຣະເຈົ້າບໍ່ກະທຳສິ່ງທີ່ເໜືອທຳມະຊາດ; ໃນແນວຄິດຂອງຜູ້ຄົນ ພຣະເຈົ້າລິດທານຸພາບສູງສຸດ ແລະ ພຣະອົງເຮັດທຸກສິ່ງຢ່າງ, ຜົນຕາມມາກໍຄືຜູ້ຄົນລໍຖ້າຢູ່ຊື່ໆ, ບໍ່ອ່ານພຣະທຳຂອງພຣະເຈົ້າ ຫຼື ອະທິຖານ ແລະ ພຽງແຕ່ລໍຖ້າການສຳຜັດຂອງພຣະວິນຍານບໍລິສຸດເທົ່ານັ້ນ. ເຖິງຢ່າງໃດກໍຕາມ ຄົນທີ່ມີຄວາມເຂົ້າໃຈຢ່າງຖືກຕ້ອງແມ່ນເຊື່ອໃນສິ່ງນີ້ ແລະ ມັກເວົ້າວ່າ: ການກະທຳຂອງພຣະເຈົ້າສາມາດບັນລຸໄດ້ຈາກການຮ່ວມມືຂອງຂ້ານ້ອຍເທົ່ານັ້ນ ແລະ ຜົນກະທົບທີ່ພາລະກິດຂອງພຣະເຈົ້າມີຢູ່ໃນຕົວຂ້ານ້ອຍກໍຂຶ້ນກັບວ່າ ຂ້ານ້ອຍຮ່ວມມືແນວໃດ. ເມື່ອພຣະເຈົ້າກ່າວ ຂ້ານ້ອຍຄວນເຮັດທຸກສິ່ງທີ່ຂ້ານ້ອຍສາມາດເຮັດໄດ້ເພື່ອສະແຫວງຫາ ແລະ ພະຍາຍາມໃຫ້ບັນລຸຕາມພຣະທຳຂອງພຣະເຈົ້າ; ນີ້ຄືສິ່ງທີ່ຂ້ານ້ອຍຄວນເຮັດໃຫ້ສຳເລັດ.

ໃນຕົວຢ່າງຂອງເປໂຕ ແລະ ໂປໂລ ພວກເຈົ້າສາມາເຫັນໄດ້ຢ່າງຊັດເຈນວ່າ ເປໂຕເອົາໃຈໃສ່ກັບຄວາມເປັນຈິງຫຼາຍທີ່ສຸດ. ຈາກສິ່ງທີ່ເປໂຕໄດ້ພົບພໍ້ ມັນສາມາດເຫັນໄດ້ວ່າ ປະສົບການຂອງເພິ່ນແມ່ນຂໍ້ສະຫຼຸບບົດຮຽນຂອງຄົນທີ່ລົ້ມເຫຼວໃນອະດີດ ແລະ ເພິ່ນໄດ້ຊຶມຊັບຄວາມເຂັ້ມແຂງຈາກທຳມິກກະຊົນທີ່ຢູ່ໃນອະດີດ. ຈາກສິ່ງນີ້ ມັນສາມາດເຫັນໄດ້ວ່າ ປະສົບການຂອງເປໂຕເປັນຈິງຫຼາຍສໍ່າໃດ, ຜູ້ຄົນສາມາດພົວພັນ ແລະ ສຳຜັດກັບປະສົບການເຫຼົ່ານີ້ ແລະ ບັນລຸພວກມັນໄດ້. ເຖິງຢ່າງໃດກໍຕາມ, ໂປໂລແມ່ນແຕກຕ່າງ ນັ້ນກໍຄື: ທຸກສິ່ງທີ່ເພິ່ນເວົ້າແມ່ນເປັນສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ສາມາດເຫັນໄດ້ເຊັ່ນ: ການໄປສະຫວັນຊັ້ນສາມ, ການຂຶ້ນຄອງບັນລັງ ແລະ ມົງກຸດແຫ່ງຄວາມຊອບທຳ. ເພິ່ນໃສ່ໃຈກັບສິ່ງທີ່ຢູ່ພາຍນອກ ນັ້ນກໍຄື: ສະຖານະພາບ ແລະ ການສັ່ງສອນຜູ້ຄົນ, ການສະແດງອອກເຖິງຄວາມອາວຸໂສຂອງເພິ່ນ, ການຖືກສຳຜັດໂດຍພຣະວິນຍານບໍລິສຸດ ແລະ ອື່ນໆອີກ. ບໍ່ມີສິ່ງໃດທີ່ເພິ່ນສະແຫວງຫານັ້ນເປັນເລື່ອງຈິງ ແລະ ສ່ວນຫຼາຍແລ້ວກໍເປັນຄວາມເພີ້ຝັນ ແລະ ດ້ວຍເຫດນັ້ນ ສາມາດເຫັນໄດ້ວ່າ ທຸກສິ່ງທີ່ເໜືອທຳມະຊາດ ເຊັ່ນ: ພຣະວິນຍານບໍລິສຸດສຳຜັດຜູ້ຄົນຫຼາຍສໍ່າໃດ, ຄວາມປິຕິຍິນດີອັນຍິ່ງໃຫຍ່ທີ່ຜູ້ຄົນໄດ້ຮັບ, ການໄປສະຫວັນຊັ້ນສາມ ຫຼື ຂອບເຂດທີ່ພວກເຂົາມີຄວາມສຸກກັບການຝຶກຝົນຂອງພວກເຂົາ, ຂອບເຂດທີ່ພວກເຂົາມີຄວາມສຸກກັບການອ່ານພຣະທຳຂອງພຣະເຈົ້າເຊິ່ງບໍ່ມີສິ່ງໃດທີ່ເວົ້າມາເປັນຄວາມຈິງເລີຍ. ພາລະກິດທຸກຢ່າງຂອງພຣະວິນຍານບໍລິສຸດເປັນສິ່ງທີ່ທຳມະດາ ແລະ ເປັນຈິງ. ເມື່ອເຈົ້າອ່ານພຣະທຳຂອງພຣະເຈົ້າ ແລະ ອະທິຖານ, ເຈົ້າຈະເບີກບານ ແລະໝັ້ນຄົງຢູ່ພາຍໃນ, ໂລກພາຍນອກຈະບໍ່ສາມາດລົບກວນເຈົ້າໄດ້, ເຈົ້າເຕັມໃຈທີ່ຈະຮັກພຣະເຈົ້າຢູ່ພາຍໃນ, ເຕັມໃຈທີ່ຈະມີສ່ວນຮ່ວມກັບສິ່ງທີ່ເປັນບວກ ແລະ ເຈົ້າຈະກຽດຊັງໂລກທີ່ຊົ່ວຮ້າຍ. ນີ້ແມ່ນການດຳລົງຊີວິດພາຍໃນພຣະເຈົ້າ. ມັນບໍ່ແມ່ນການເພີດເພີນຢ່າງຫຼວງຫຼາຍຄືກັບທີ່ຜູ້ຄົນພາກັນເວົ້າ, ການເວົ້າແບບນັ້ນບໍ່ມີຄວາມຈິງເລີຍ. ໃນປັດຈຸບັນ ທຸກສິ່ງເລີ່ມຕົ້ນຈາກຄວາມເປັນຈິງ. ທຸກສິ່ງທີ່ພຣະເຈົ້າເຮັດແມ່ນຄວາມຈິງ ແລະ ໃນປະສົບການຂອງເຈົ້າ, ເຈົ້າກໍຄວນໃສ່ໃຈໃນການຮູ້ຈັກພຣະເຈົ້າຢ່າງແທ້ຈິງ ແລະ ຄົ້ນຫາຮ່ອງຮອຍແຫ່ງພາລະກິດຂອງພຣະເຈົ້າ ແລະ ວິທີທາງທີ່ພຣະວິນຍານບໍລິສຸດສຳຜັດ ແລະ ເຮັດໃຫ້ຜູ້ຄົນສະຫວ່າງຂຶ້ນ. ຖ້າເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ອະທິຖານແລະ ຮ່ວມມືໃນລັກສະນະທີ່ເປັນຈິງຫຼາຍຂຶ້ນ ໂດຍຮັບເອົາສິ່ງທີ່ດີຈາກອະດີດ ແລະ ປະຕິເສດສິ່ງທີ່ບໍ່ດີຄືກັບເປໂຕ, ຖ້າເຈົ້າຟັງດ້ວຍຫູຂອງເຈົ້າ ແລະ ສັງເກດດ້ວຍຕາຂອງເຈົ້າ ແລະ ເຮັດທຸກຢ່າງເພື່ອຮ່ວມມືໃນພາລະກິດຂອງພຣະເຈົ້າ ແລ້ວພຣະເຈົ້າກໍຈະນຳພາເຈົ້າຢ່າງແນ່ນອນ.

# ກ່ຽວກັບຊີວິດຝ່າຍວິນຍານປົກກະຕິ

ຄວາມເຊື່ອໃນພຣະເຈົ້າຈຳເປັນຕ້ອງມີຊີວິດຝ່າຍວິນຍານປົກກະຕິ, ເຊິ່ງເປັນພື້ນຖານສຳລັບການມີປະສົບການກັບພຣະທຳຂອງພຣະເຈົ້າ ແລະ ການເຂົ້າສູ່ຄວາມເປັນຈິງ. ການປະຕິບັດການອະທິຖານໃນປັດຈຸບັນຂອງພວກເຈົ້າ, ການຫຍັບເຂົ້າໃກ້ພຣະເຈົ້າ, ການຮ້ອງນະມັດສະການ, ການສັນລະເສີນ, ການປະຕິບັດສະມາທິ ແລະ ການໄຕ່ຕອງພຣະທຳຂອງພຣະເຈົ້າເທົ່າກັບ "ຊີວິດຝ່າຍວິນຍານທີ່ປົກກະຕິ" ບໍ? ບໍ່ມີໃຜໃນບັນດາພວກເຈົ້າທີ່ຮູ້. ຊີວິດຝ່າຍວິນຍານປົກກະຕິ ບໍ່ໄດ້ຈຳກັດຢູ່ທີ່ການປະຕິບັດເຊັ່ນ: ການອະທິຖານ, ການຮ້ອງເພງນະມັດສະການ, ການມີຊີວິດຄຣິດຕະຈັກ ແລະ ການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າ. ກົງກັນຂ້າມ, ມັນປະກອບມີການໃຊ້ຊີວິດຝ່າຍວິນຍານທີ່ໃໝ່ ແລະ ຢ່າງມີຊີວິດຊີວາ. ສິ່ງທີ່ສຳຄັນບໍ່ແມ່ນວິທີການທີ່ເຈົ້າປະຕິບັດ, ແຕ່ກ່ຽວກັບໝາກຜົນທີ່ການປະຕິບັດຂອງເຈົ້າເກີດອອກ. ຜູ້ຄົນສ່ວນໃຫຍ່ເຊື່ອວ່າ ຊີວິດຝ່າຍວິນຍານປົກກະຕິປະກອບມີການອະທິຖານ, ການຮ້ອງເພງນະມັດສະການ, ການກິນ ແລະ ການດື່ມ ພຣະທຳຂອງພຣະເຈົ້າ ຫຼື ການໄຕ່ຕອງພຣະທຳຂອງພຣະອົງ, ບໍ່ວ່າການປະຕິບັດດັ່ງກ່າວຈະມີຜົນແບບໃດກໍ່ຕາມ ຫຼື ນຳໄປສູ່ຄວາມເຂົ້າໃຈທີ່ແທ້ຈິງ ຫຼື ບໍ່ກໍ່ຕາມ. ຄົນເຫຼົ່ານີ້ໃສ່ໃຈກັບການປະຕິບັດຕາມລະບຽບການທີ່ພໍເປັນພິທີ ໂດຍບໍ່ຄິດເຖິງຜົນຕາມມາຂອງພວກມັນ; ພວກເຂົາເປັນຄົນທີ່ດຳລົງຊີວິດຢູ່ໃນພິທີກຳທາງສາສະໜາ, ບໍ່ແມ່ນຄົນທີ່ດຳລົງຊີວິດຢູ່ພາຍໃນຄຣິດຕະຈັກ ແລະ ແຮງໄກທີ່ພວກເຂົາຈະເປັນປະຊາຊົນແຫ່ງອານາຈັກ. ຄຳອະທິຖານ, ການຮ້ອງເພງນະມັດສະການ ແລະ ການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າຂອງພວກເຂົາລ້ວນແລ້ວແຕ່ເປັນການເຮັດຕາມກົດລະບຽບເທົ່ານັ້ນ, ເກີດຂຶ້ນຈາກການບັງຄັບ ແລະ ຕາມທັນຄ່ານິຍົມ, ບໍ່ໄດ້ອອກຈາກຄວາມເຕັມໃຈ ຫຼື ຈາກຫົວໃຈ. ບໍ່ວ່າຄົນເຫຼົ່ານີ້ຈະອະທິຖານ ຫຼື ຮ້ອງເພງຫຼາຍສໍ່າໃດກໍ່ຕາມ, ຄວາມພະຍາຍາມຂອງພວກເຂົາກໍຈະບໍ່ເກີດຜົນ, ຍ້ອນສິ່ງທີ່ພວກເຂົາປະຕິບັດເປັນພຽງກົດລະບຽບ ແລະ ພິທີກຳຕ່າງໆທາງສາດສະໜາ; ພວກເຂົາບໍ່ໄດ້ເຮັດຕາມພຣະທຳຂອງພຣະເຈົ້າແທ້ໆ. ພວກເຂົາພຽງແຕ່ກັງວົນຫຼາຍເກີນໄປກ່ຽວກັບວິທີການທີ່ພວກເຂົາປະຕິບັດ ແລະ ພວກເຂົາປະຕິບັດຕໍ່ພຣະທຳຂອງພຣະເຈົ້າຄືກັບກົດລະບຽບໃຫ້ປະຕິບັດຕາມ. ຄົນປະເພດນີ້ແມ່ນບໍ່ໄດ້ປະຕິບັດຕາມພຣະທຳຂອງພຣະເຈົ້າ; ພວກເຂົາພຽງແຕ່ເຮັດເພື່ອເປັນທີ່ພໍໃຈຝ່າຍເນື້ອໜັງ ແລະ ເຮັດເພື່ອໃຫ້ຄົນອື່ນ. ກົດລະບຽບ ແລະ ພິທີກຳທາງສາດສະໜາເຫຼົ່ານີ້ແມ່ນລ້ວນແລ້ວແຕ່ກຳເນີດມາຈາກມະນຸດ; ພວກມັນບໍ່ໄດ້ມາຈາກພຣະເຈົ້າ. ພຣະເຈົ້າບໍ່ໄດ້ປະຕິບັດຕາມກົດລະບຽບ ຫຼື ພຣະອົງບໍ່ໄດ້ຢູ່ພາຍໃຕ້ກົດເກນໃດໜຶ່ງ. ກົງກັນຂ້າມ, ພຣະອົງກະທຳສິ່ງໃໝ່ທຸກວັນ, ສຳເລັດພາລະກິດຕົວຈິງ. ເຊັ່ນດຽວກັນກັບຄົນທີ່ຢູ່ໃນຄຣິດຕະຈັກສາມຕົນ, ຜູ້ທີ່ຈຳກັດຕົວເອງຢູ່ກັບການປະຕິບັດ ເຊັ່ນ: ການເຂົ້າຮ່ວມການບໍລິການຕອນເຊົ້າທຸກໆມື້, ການອະທິຖານໃນຍາມແລງ ແລະ ການຂອບພຣະຄຸນກ່ອນອາຫານ ແລະ ການສະແດງຄວາມຂອບໃຈໃນທຸກສິ່ງ, ເຖິງແມ່ນວ່າພວກເຂົາຈະເຮັດຫຼາຍສໍ່າໃດ ແລະ ພວກເຂົາຈະເຮັດດົນສໍ່າໃດກໍຕາມ, ພວກເຂົາກໍຈະບໍ່ມີພາລະກິດຂອງພຣະວິນຍານບໍລິສຸດ. ເມື່ອຜູ້ຄົນອາໄສຢູ່

ທ່າມກາງກົດລະບຽບ ແລະ ເຮັດໃຫ້ຫົວໃຈຂອງພວກເຂົາແນໃສ່ວິທີການປະຕິບັດ, ພຣະວິນຍານບໍລິສຸດກໍບໍ່ສາມາດປະຕິບັດພາລະກິດໄດ້, ເພາະວ່າ ຫົວໃຈຂອງຄົນເຫຼົ່ານັ້ນເຕັມໄປດ້ວຍກົດລະບຽບ ແລະ ແນວຄວາມຄິດຕ່າງໆຂອງມະນຸດ. ດັ່ງນັ້ນ ພຣະເຈົ້າຈຶ່ງບໍ່ສາມາດແຊກແຊງ ແລະ ປະຕິບັດພາລະກິດໃນພວກເຂົາ ແລະ ພວກເຂົາພຽງແຕ່ສາມາດສືບຕໍ່ດຳລົງຊີວິດຢູ່ພາຍໃຕ້ການຄວບຄຸມຂອງກົດເກນ. ຄົນປະເພດນີ້ ຈະບໍ່ສາມາດຮັບການຍ້ອງຍໍຈາກພຣະເຈົ້າໄດ້ຕະຫຼອດໄປ.

ການມີຊີວິດຝ່າຍວິນຍານປົກກະຕິຄືການດຳລົງຊີວິດຢູ່ຕໍ່ໜ້າພຣະເຈົ້າ. ເມື່ອອະທິຖານ ຄົນໆໜຶ່ງສາມາດສະຫງົບຫົວໃຈຂອງຕົນຕໍ່ໜ້າພຣະອົງ ແລະ ຜ່ານການອະທິຖານ ຄົນໆໜຶ່ງສາມາດສະແຫວງຫາຄວາມສະຫວ່າງ ຂອງພຣະວິນຍານບໍລິສຸດໄດ້, ຮູ້ຈັກພຣະທຳຂອງພຣະເຈົ້າ ແລະ ເຂົ້າໃຈຄວາມປະສົງຂອງພຣະອົງ. ເມື່ອກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຜູ້ຄົນສາມາດໄດ້ຮັບຄວາມເຂົ້າໃຈຊັດເຈນຍິ່ງຂຶ້ນ ແລະ ລະອຽດຍິ່ງຂຶ້ນກ່ຽວກັບພາລະກິດໃນປັດຈຸບັນຂອງພຣະເຈົ້າ. ພວກເຂົາຍັງສາມາດຮັບເອົາເສັ້ນທາງໃໝ່ຂອງການປະຕິບັດ ແລະ ຈະບໍ່ຍຶດຕິດກັບເສັ້ນທາງເກົ່າ; ສິ່ງທີ່ພວກເຂົາປະຕິບັດຈະມີເພື່ອບັນລຸຄວາມກ້າວໜ້າໃນຊີວິດເທົ່ານັ້ນ. ແລ້ວສຳລັບການອະທິຖານ, ມັນບໍ່ໄດ້ກ່ຽວກັບການກ່າວຄຳເວົ້າສອງສາມຄຳທີ່ຟັງດູດີ ຫຼື ການຮ້ອງໂຮ່ໄຫ້ຕໍ່ໜ້າພຣະເຈົ້າ ເພື່ອສະແດງວ່າເຈົ້າເປັນໜີ້ບຸນຄົນຫຼາຍສໍ່າໃດ; ກົງກັນຂ້າມ ຈຸດປະສົງແມ່ນເພື່ອຝຶກຝົນຕົນເອງໃນການໃຊ້ງານຂອງວິນຍານ, ປ່ອຍໃຫ້ຄົນໆໜຶ່ງສະຫງົບຫົວໃຈຂອງເຂົາລົງຕໍ່ໜ້າພຣະເຈົ້າ, ຝຶກຝົນຕົນເອງເພື່ອຊອກຫາການຊີ້ນຳຈາກພຣະທຳຂອງພຣະເຈົ້າໃນທຸກດ້ານ, ເພື່ອວ່າຫົວໃຈຂອງຄົນໆໜຶ່ງຈະສາມາດສະແຫວງຫາຄວາມສະຫວ່າງໃໝ່ທຸກວັນ ແລະ ເພື່ອວ່າຄົນໆໜຶ່ງຈະບໍ່ຢູ່ລ້າໆ ຫຼື ຂີ້ຄ້ານ ແລະ ອາດກ້າວເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການປະຕິບັດຕາມພຣະທຳຂອງພຣະເຈົ້າ, ແຕ່ພວກເຂົາຍັງບໍ່ໄດ້ເຮັດເພື່ອສະແຫວງຫາຄວາມຈິງ ແລະ ບັນລຸການເຕີບໂຕໃນຊີວິດ. ນີ້ຄືບ່ອນທີ່ພວກເຂົາຫຼົງທາງ. ຍັງມີຄົນຈຳນວນໜຶ່ງທີ່ສາມາດຮັບເອົາຄວາມສະຫວ່າງໃໝ່, ແຕ່ວິທີການປະຕິບັດຂອງພວກເຂົາຍັງຄົງບໍ່ປ່ຽນແປງ. ພວກເຂົານຳແນວຄິດທາງສາດສະໜາໃນອະດີດຂອງພວກເຂົາມາກັບພວກເຂົາ ໃນຂະນະທີ່ພວກເຂົາລໍຖ້າຮັບພຣະທຳຂອງພຣະເຈົ້າໃນປັດຈຸບັນ, ແລ້ວສິ່ງທີ່ພວກເຂົາໄດ້ຮັບຍັງຄົງເປັນຫຼັກຄຳສອນທີ່ເຈືອປົນດ້ວຍແນວຄິດທາງສາສະໜາ; ພວກເຂົາບໍ່ໄດ້ຮັບແສງສະຫວ່າງຂອງທຸກມື້ນີ້ຢ່າງແທ້ຈິງ. ຜົນຕາມມາກໍຄືການປະຕິບັດຂອງພວກເຂົາມີການເຈືອປົນ; ພວກມັນເປັນການປະຕິບັດເດີມ ແຕ່ຢູ່ໃນຜັດສະດຸຫຸ້ມຫໍ່ໃໝ່. ບໍ່ວ່າການປະຕິບັດຂອງພວກເຂົາຈະດີສໍ່າໃດກໍ່ຕາມ, ພວກເຂົາກໍຍັງເປັນຄົນໜ້າໄຫວ້ຫຼັງຫຼອກ. ພຣະເຈົ້ານຳພາຜູ້ຄົນເຮັດສິ່ງໃໝ່ທຸກວັນ, ຮຽກຮ້ອງວ່າໃນແຕ່ລະມື້ ພວກເຂົາຈະໄດ້ຮັບຄວາມຮູ້ ແລະ ຄວາມເຂົ້າໃຈ ແລະ ຮຽກຮ້ອງໃຫ້ພວກເຂົາບໍ່ຫຼ້າສະໄໝ ຫຼື ເຮັດຊໍ້າໆ. ຖ້າເຈົ້າໄດ້ເຊື່ອພຣະເຈົ້າເປັນເວລາຫຼາຍປີ, ແຕ່ວິທີປະຕິບັດຂອງເຈົ້າບໍ່ມີການປ່ຽນແປງຫຍັງເລີຍ ແລະ ຖ້າເຈົ້າຍັງເອົາຈິງເອົາຈັງ ແລະ ຫຍຸ້ງຢູ່ກັບສິ່ງພາຍນອກ ແຕ່ບໍ່ນຳຫົວໃຈທີ່ງຽບສະຫງົບມາຢູ່ຕໍ່ໜ້າພຣະເຈົ້າເພື່ອຊື່ນຊົມກັບພຣະທຳຂອງພຣະອົງ, ແລ້ວເຈົ້າຈະບໍ່ສາມາດໄດ້ຮັບຫຍັງເລີຍ. ເມື່ອເວົ້າເຖິງການຍອມຮັບພາລະກິດໃໝ່ຂອງພຣະເຈົ້າ, ຖ້າເຈົ້າບໍ່ມີແຜນການທີ່ແຕກຕ່າງ, ບໍ່ປະຕິບັດໃນລັກສະນະໃໝ່ ແລະ

ບໍ່ສະແຫວງຫາຄວາມເຂົ້າໃຈໃໝ່, ແຕ່ກົງກັນຂ້າມເຈົ້າຍຶດຖືກັບສິ່ງເດີມໆ ແລະ ພຽງແຕ່ຮັບເອົາແສງສະຫວ່າງໃໝ່ບາງຢ່າງທີ່ຈຳກັດ. ໂດຍບໍ່ປ່ຽນແປງວິທີການທີ່ເຈົ້າປະຕິບັດ, ແລ້ວຜູ້ຄົນປະເພດນີ້ແມ່ນຢູ່ໃນກະແສດັ່ງກ່າວພຽງໃນນາມ; ໃນຄວາມເປັນຈິງແລ້ວ ພວກເຂົາເປັນພວກຟາຣີຊາຍທີ່ເຄັ່ງສາສະໜາເຊິ່ງຢູ່ນອກກະແສຂອງພຣະວິນຍານບໍລິສຸດ.

ເພື່ອມີຊີວິດຝ່າຍວິນຍານປົກກະຕິ, ຄົນໆໜຶ່ງເຈົ້າສາມາດຮັບເອົາຄວາມສະຫວ່າງໃໝ່ໃນແຕ່ລະມື້ ແລະ ສະແຫວງຫາຄວາມເຂົ້າໃຈອັນແທ້ຈິງກ່ຽວກັບພຣະທຳຂອງພຣະເຈົ້າ. ຄົນໆໜຶ່ງຕ້ອງເຫັນຄວາມຈິງຢ່າງຊັດເຈນ, ຊອກຫາເສັ້ນທາງການປະຕິບັດໃນທຸກສິ່ງ, ຄົ້ນພົບຄຳຖາມໃໝ່ຜ່ານການອ່ານພຣະທຳຂອງພຣະເຈົ້າໃນແຕ່ລະມື້ ແລະ ຮັບຮູ້ຂໍ້ບົກຜ່ອງຂອງຕົນເອງ ເພື່ອວ່າຄົນໆໜຶ່ງອາດມີຫົວໃຈທີ່ກະຫາຍ ແລະ ຢາກຄົ້ນຫາທີ່ຂັບເຄື່ອນການເປັນຢູ່ທັງໝົດຂອງຄົນໆນັ້ນ ແລະ ເພື່ອວ່າຄົນໆໜຶ່ງອາດສະຫງົບລົງຕໍ່ໜ້າພຣະເຈົ້າໄດ້ທຸກເວລາ, ຢ້ານກົວຢູ່ເລິກໆວ່າຈະຖືກປະໄວ້ຢູ່ທາງຫຼັງ. ບຸກຄົນທີ່ມີຫົວໃຈທີ່ກະຫາຍ ແລະ ຢາກຄົ້ນຫາ, ຜູ້ທີ່ເຕັມໃຈຈະຮັບທາງເຂົ້າຢ່າງຕໍ່ເນື່ອງ, ແມ່ນຢູ່ໃນເສັ້ນທາງທີ່ຖືກຕ້ອງຂອງຊີວິດຝ່າຍວິນຍານ. ຄົນທີ່ຖືກຂັບເຄື່ອນໂດຍພຣະວິນຍານບໍລິສຸດ, ຜູ້ທີ່ປາຖະໜາຈະເຮັດດີຂຶ້ນ, ຜູ້ທີ່ເຕັມໃຈສະແຫວງຫາເພື່ອຖືກພຣະເຈົ້າເຮັດໃຫ້ສົມບູນ, ຜູ້ທີ່ຕ້ອງການເຂົ້າໃຈພຣະທຳຂອງພຣະເຈົ້າຢ່າງເລິກເຊິ່ງຍິ່ງຂຶ້ນ, ຜູ້ທີ່ບໍ່ສະແຫວງຫາສິ່ງທີ່ເໜືອທຳມະຊາດ ແຕ່ກົງກັນຂ້າມຄືຈ່າຍຕາມລາຄາຕົວຈິງ, ຜູ້ທີ່ຫ່ວງໃຍຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ, ຜູ້ທີ່ໄດ້ຮັບທາງເຂົ້າຢ່າງແທ້ຈິງເພື່ອວ່າປະສົບການພວກເຂົາຈະເປັນຈິງ ແລະ ມີຄວາມຈິງ, ຜູ້ທີ່ບໍ່ສະແຫວງຫາຖ້ອຍຄຳທີ່ວ່າງເປົ່າ ແລະຫຼັກຄຳສອນ ຫຼື ສະແຫວງຫາເພື່ອຮູ້ສຶກເຖິງສິ່ງເໜືອທຳມະຊາດ, ຜູ້ທີ່ບໍ່ບູຊາບຸກຄົນທີ່ຍິ່ງໃຫຍ່ໃດໆ, ຄົນເຫຼົ່ານີ້ແມ່ນຄົນທີ່ໄດ້ເຂົ້າສູ່ຊີວິດຝ່າຍວິນຍານປົກກະຕິ. ທຸກສິ່ງທີ່ພວກເຂົາປະຕິບັດແມ່ນມີຈຸດປະສົງເພື່ອບັນລຸການເຕີບໂຕໃນຊີວິດ ແລະ ເພື່ອຮັກສາວິນຍານຂອງຕົນໃຫ້ມີຄວາມສົດຊື່ນ ແລະ ມີຊີວິດຊີວາ ແລະ ພວກເຂົາສາມາດຮັບທາງເຂົ້າຢ່າງຫ້າວຫັນຢູ່ສະເໝີ. ຫາກບໍ່ຮັບຮູ້ມັນ, ພວກເຂົາກໍມາເຂົ້າໃຈຄວາມຈິງ ແລະ ເຂົ້າສູ່ຄວາມເປັນຈິງ. ຄົນທີ່ມີຊີວິດຝ່າຍວິນຍານປົກກະຕິຄົ້ນພົບຄວາມຫຼຸດພົ້ນ ແລະ ອິດສະຫຼະໃນວິນຍານໃນທຸກໆວັນ ແລະ ພວກເຂົາສາມາດປະຕິບັດຕາມພຣະທຳຂອງພຣະເຈົ້າໃນລັກສະນະທີ່ເປັນອິດສະຫຼະເພື່ອເຮັດໃຫ້ພຣະອົງພໍໃຈ. ສຳລັບຄົນເຫຼົ່ານີ້, ການອະທິຖານບໍ່ແມ່ນສິ່ງທີ່ເປັນທາງການ ຫຼື ລະບຽບການ; ໃນແຕ່ລະມື້, ພວກເຂົາສາມາດຕາມທັນແສງສະຫວ່າງໃໝ່. ຕົວຢ່າງ: ຜູ້ຄົນຝຶກຝົນຕົວເອງໃຫ້ສະຫງົບຫົວໃຈຂອງພວກເຂົາຕໍ່ໜ້າພຣະເຈົ້າ ແລະ ຫົວໃຈຂອງພວກເຂົາກໍງຽບສະຫງົບຕໍ່ໜ້າພຣະອົງໄດ້ຢ່າງແທ້ຈິງ ແລະ ຈະບໍ່ມີໃຜສາມາດລົບກວນພວກເຂົາໄດ້. ບໍ່ມີຜູ້ຄົນ, ເຫດການ ຫຼື ສິ່ງໃດກໍຕາມທີ່ສາມາດຢັບຢັ້ງຊີວິດຝ່າຍວິນຍານປົກກະຕິຂອງພວກເຂົາໄດ້. ການຝຶກຝົນດັ່ງກ່າວແມ່ນມີເຈດຕະນາເພື່ອບັນລຸຜົນ; ມັນບໍ່ໄດ້ມີເຈດຕະນາເພື່ອເຮັດໃຫ້ຜູ້ຄົນປະຕິບັດຕາມກົດລະບຽບ. ການປະຕິບັດແບບນີ້ບໍ່ແມ່ນການປະຕິບັດຕາມກົດລະບຽບ, ແຕ່ແມ່ນກ່ຽວກັບການສົ່ງເສີມການເຕີບໂຕໃນຊີວິດຂອງຜູ້ຄົນ. ຖ້າເຈົ້າພຽງແຕ່ເຫັນການປະຕິບັດນີ້ເປັນພຽງກົດລະບຽບໃຫ້ປະຕິບັດ, ຊີວິດຂອງເຈົ້າກໍຈະບໍ່ປ່ຽນແປງຈັກເທື່ອ. ເຈົ້າອາດເຂົ້າຮ່ວມໃນການປະຕິບັດແບບດຽວກັບ

ຄົນອື່ນ, ແຕ່ໃນຂະນະທີ່ພວກເຂົາສາມາດຕາມທັນພາລະກິດຂອງພຣະວິນຍານບໍລິສຸດໄດ້ໃນທີ່ສຸດ, ເຈົ້າຈະຖືກໂຍນອອກຈາກກະແສຂອງພຣະວິນຍານບໍລິສຸດ. ເຈົ້າບໍ່ໄດ້ກຳລັງຫຼອກລວງຕົວເອງບໍ? ຈຸດປະສົງຂອງພຣະທຳເຫຼົ່ານີ້ແມ່ນເພື່ອເຮັດໃຫ້ຜູ້ຄົນສາມາດສະຫງົບຫົວໃຈຂອງພວກເຂົາຕໍ່ໜ້າພຣະເຈົ້າ, ຫັນຫົວໃຈຂອງພວກເຂົາເຂົ້າຫາພຣະອົງ, ເພື່ອວ່າພາລະກິດຂອງພຣະເຈົ້າໃນພວກເຂົາອາດບໍ່ມີສິ່ງຂັດຂວາງ ແລະ ອາດເກີດດອກອອກຜົນ. ມີແຕ່ເມື່ອນັ້ນ ຜູ້ຄົນຈຶ່ງສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້.

# ການສົນທະນາກ່ຽວກັບ ຊີວິດຄຣິສຕະຈັກ ແລະ ຊີວິດທີ່ເປັນຈິງ

ຜູ້ຄົນຮູ້ສຶກວ່າ ພວກເຂົາພຽງແຕ່ສາມາດປ່ຽນແປງພາຍໃນຊີວິດຄຣິສຕະຈັກເທົ່ານັ້ນ. ຖ້າພວກເຂົາບໍ່ໄດ້ຢູ່ພາຍໃນຊີວິດຄຣິສຕະຈັກ, ແລ້ວພວກເຂົາກໍ່ຮູ້ສຶກວ່າບໍ່ສາມາດປ່ຽນແປງໄດ້ ຄືກັບວ່າການປ່ຽນແປງບໍ່ສາມາດຖືກບັນລຸໄດ້ໃນຊີວິດຈິງ. ພວກເຈົ້າສາມາດເຫັນເຖິງບັນຫາທີ່ຢູ່ໃນນີ້ໄດ້ບໍ? ເຮົາໄດ້ສົນທະນາເຖິງການນຳເອົາພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງກ່ອນໜ້າແລ້ວ; ສຳລັບຄົນທີ່ເຊື່ອໃນພຣະເຈົ້າ, ນີ້ແມ່ນເສັ້ນທາງທີ່ຈະເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ. ໃນຄວາມເປັນຈິງແລ້ວ, ຊີວິດຄຣິສຕະຈັກເປັນພຽງຫົນທາງທີ່ຈຳກັດໃນການເຮັດໃຫ້ມະນຸດສົມບູນ. ສະພາບແວດລ້ອມຫຼັກທີ່ຈະເຮັດໃຫ້ມະນຸດສົມບູນກໍ່ຍັງແມ່ນຊີວິດທີ່ເປັນຈິງ. ນີ້ແມ່ນການປະຕິບັດຕົວຈິງ ແລະ ການຝຶກຝົນຕົວຈິງທີ່ເຮົາເວົ້າເຖິງ ເຊິ່ງເຮັດໃຫ້ຜູ້ຄົນບັນລຸຊີວິດຂອງຄວາມເປັນມະນຸດທີ່ປົກກະຕິ ແລະ ດຳລົງຊີວິດຕາມລັກສະນະຂອງບຸກຄົນທີ່ແທ້ຈິງໃນຊີວິດປະຈຳວັນ. ໃນດ້ານໜຶ່ງ, ຄົນໆໜຶ່ງຕ້ອງສຶກສາເພື່ອຍົກສູງລະດັບການສຶກສາຂອງພວກເຂົາເອງ, ເຂົ້າໃຈພຣະທຳຂອງພຣະເຈົ້າ ແລະ ບັນລຸຄວາມສາມາດທີ່ຈະຮັບໄດ້. ໃນອີກດ້ານໜຶ່ງ, ຄົນໆໜຶ່ງຕ້ອງປະກອບມີຄວາມຮູ້ພື້ນຖານທີ່ຈຳເປັນໃນການດຳລົງຊີວິດແບບມະນຸດ ເພື່ອບັນລຸຄວາມເຂົ້າໃຈ ແລະ ເຫດຜົນຂອງຄວາມເປັນມະນຸດທີ່ປົກກະຕິ ເພາະວ່າຜູ້ຄົນເກືອບຂາດທຸກສິ່ງໃນຂົງເຂດເຫຼົ່ານີ້. ຍິ່ງໄປກວ່ານັ້ນ, ຄົນໆໜຶ່ງຍັງຕ້ອງໄດ້ມາຊີມລົດຊາດພຣະທຳຂອງພຣະເຈົ້າຜ່ານທາງຊີວິດຄຣິສຕະຈັກອີກດ້ວຍ ແລະ ເລີ່ມມີຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບຄວາມຈິງເທື່ອລະໜ້ອຍ.

ເປັນຫຍັງຈຶ່ງເວົ້າວ່າ ໃນການເຊື່ອໃນພຣະເຈົ້າ ຄົນໆໜຶ່ງຕ້ອງນຳເອົາພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງ? ມັນບໍ່ແມ່ນພຽງແຕ່ຊີວິດຄຣິສຕະຈັກທີ່ປ່ຽນແປງຜູ້ຄົນ; ສິ່ງທີ່ສຳຄັນໄປກວ່ານັ້ນກໍ່ຄື ຜູ້ຄົນຄວນເຂົ້າສູ່ຄວາມເປັນຈິງໃນຊີວິດທີ່ເປັນຈິງ. ພວກເຈົ້າເຄີຍລົມກ່ຽວກັບສະພາວະຝ່າຍວິນຍານ ແລະ ບັນຫາຕ່າງໆຝ່າຍວິນຍານຂອງພວກເຈົ້າຢູ່ສະເໝີ ໃນຂະນະທີ່ເບິ່ງຂ້າມການປະຕິບັດຫຼາຍສິ່ງໃນຊີວິດຈິງ ແລະ ເບິ່ງຂ້າມທາງເຂົ້າສູ່ສິ່ງເຫຼົ່ານັ້ນອີກດ້ວຍ. ພວກເຈົ້າຂຽນທຸກມື້, ພວກເຈົ້າຟັງທຸກມື້ ແລະ ພວກເຈົ້າອ່ານທຸກມື້. ພວກເຈົ້າເຖິງກັບອະທິຖານໃນຂະນະທີ່ພວກເຈົ້າກຳລັງຄົວກິນ "ໂອ ພຣະເຈົ້າ! ຂໍໃຫ້ພຣະອົງກາຍມາເປັນຊີວິດຢູ່ພາຍໃນຂອງຂ້ານ້ອຍ. ບໍ່ວ່າມື້ນີ້ຈະເປັນແນວໃດກໍ່ຕາມ, ຂໍໃຫ້ອວຍພອນຂ້ານ້ອຍ ແລະ ສ່ອງແສງສະຫວ່າງໃຫ້ກັບຂ້ານ້ອຍ. ບໍ່ວ່າພຣະອົງຈະໃຫ້ແສງສະຫວ່າງຫຍັງກໍ່ຕາມແກ່ຂ້ານ້ອຍໃນມື້ນີ້, ຂໍໃຫ້ຂ້ານ້ອຍເຂົ້າໃຈມັນໃນຊ່ວງເວລານີ້ດ້ວຍ, ເພື່ອວ່າພຣະທຳຂອງພຣະອົງອາດເຮັດໜ້າທີ່ເປັນຊີວິດຂອງຂ້ານ້ອຍ". ພວກເຈົ້າຍັງອະທິຖານໃນຂະນະທີ່ກຳລັງກິນເຂົ້າແລງ: "ໂອ ພຣະເຈົ້າ! ພຣະອົງໄດ້ປະທານອາຫານນີ້ໃຫ້ກັບພວກຂ້ານ້ອຍ. ຂໍໃຫ້ພຣະອົງອວຍພອນພວກຂ້ານ້ອຍ. ອາແມນ! ຂໍໃຫ້ພວກຂ້ານ້ອຍດຳລົງຊີວິດຢູ່ໂດຍພຣະອົງ. ຂໍໃຫ້ພຣະອົງຢູ່ກັບພວກຂ້ານ້ອຍ. ອາແມນ!" ຫຼັງຈາກທີ່ພວກເຈົ້າໄດ້ກິນເຂົ້າແລງແລ້ວ ແລະ ກຳລັງລ້າງຖ້ວຍ, ພວກເຈົ້າ

ກໍເລີ່ມຈົ່ມອີກຄັ້ງວ່າ "ໂອ ພຣະເຈົ້າ, ຂ້ານ້ອຍແມ່ນຖ້ວຍໃບນີ້. ພວກຂ້ານ້ອຍຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ເປັນເໝືອນກັບຖ້ວຍທີ່ຖືກໃຊ້ແລ້ວ ແລະ ຕ້ອງຖືກຊໍາລະລ້າງດ້ວຍນໍ້າ. ພຣະອົງເປັນນໍ້າ ແລະ ພຣະທໍາຂອງພຣະອົງເປັນນໍ້າແຫ່ງຊີວິດທີ່ສະໜອງໃຫ້ແກ່ຊີວິດຂອງຂ້ານ້ອຍ". ກ່ອນທີ່ພວກເຈົ້າຈະຮູ້ຕົວ, ມັນກໍ່ຮອດເວລານອນແລ້ວ ແລະ ພວກເຈົ້າກໍ່ເລີ່ມຈົ່ມອີກຄັ້ງວ່າ "ໂອ ພຣະເຈົ້າ! ພຣະອົງໄດ້ອວຍພອນຂ້ານ້ອຍ ແລະ ນໍາພາຂ້ານ້ອຍໃຫ້ຜ່ານຜົ້ນມື້ນີ້ໄປ. ຂ້ານ້ອຍຂອບພຣະຄຸນພຣະອົງຢ່າງແທ້ຈິງ...". ນີ້ແມ່ນວິທີທີ່ພວກເຈົ້າໃຊ້ເວລາໃນແຕ່ລະມື້ ແລະ ຫຼັງຈາກນັ້ນ ພວກເຈົ້າກໍ່ເຂົ້າບ່ອນນອນຂອງພວກເຈົ້າ. ຄົນສ່ວນໃຫຍ່ດໍາລົງຊີວິດແບບນີ້ທຸກມື້ ແລະ ແມ່ນແຕ່ໃນປັດຈຸບັນ ພວກເຂົາກໍ່ບໍ່ໄດ້ໃສ່ໃຈຕໍ່ທາງເຂົ້າທີ່ແທ້ຈິງ, ມີພຽງແຕ່ໃສ່ໃຈກັບການອະທິຖານແຕ່ປາກເທົ່ານັ້ນ. ນີ້ແມ່ນຊີວິດທີ່ຜ່ານມາຂອງພວກເຂົາ, ຊີວິດເດີມຂອງພວກເຂົາ. ແລ້ວຄົນສ່ວນໃຫຍ່ເປັນແບບນີ້; ພວກເຂົາຂາດການຝຶກຝົນຕົວຈິງ ແລະ ພວກເຂົາຜ່ານການປ່ຽນແປງທີ່ແທ້ຈິງພຽງເລັກນ້ອຍ. ພວກເຂົາພຽງແຕ່ອະທິຖານແຕ່ປາກເທົ່ານັ້ນ, ຍັບເຂົ້າໃກ້ພຣະເຈົ້າດ້ວຍຄໍາເວົ້າຂອງພວກເຂົາເທົ່ານັ້ນ ແຕ່ຂາດການຢັ່ງເລິກໃນຄວາມເຂົ້າໃຈຂອງພວກເຂົາ. ໃຫ້ພວກເຮົາຍົກຕົວຢ່າງທີ່ງ່າຍທີ່ສຸດ ນັ້ນກໍ່ຄື ການອະນາໄມເຮືອນຂອງພວກເຈົ້າ. ພວກເຈົ້າເຫັນເຮືອນຂອງພວກເຈົ້າເປິເປື້ອນ ສະນັ້ນ ພວກເຈົ້າກໍ່ນັ່ງຢູ່ບ່ອນນັ້ນ ແລະ ອະທິຖານວ່າ: "ໂອ ພຣະເຈົ້າ! ໃຫ້ເບິ່ງຄວາມເສື່ອມຊາມທີ່ຊາຕານໄດ້ນໍາມາສູ່ຂ້ານ້ອຍ. ຂ້ານ້ອຍສົກກະປົກເໝືອນກັບເຮືອນຫຼັງນີ້. ໂອ ພຣະເຈົ້າ! ຂ້ານ້ອຍສັນລະເສີນ ແລະ ຂອບພຣະຄຸນພຣະອົງແທ້ໆ. ຖ້າປາສະຈາກຄວາມລອດພົ້ນ ແລະ ແສງສະຫວ່າງຂອງພຣະອົງ, ຂ້ານ້ອຍຈະບໍ່ເຂົ້າໃຈຂໍ້ແທ້ຈິງນີ້ເລີຍ". ພວກເຈົ້າພຽງແຕ່ນັ່ງຢູ່ບ່ອນນັ້ນ ແລະ ຈົ່ມໄປເລື້ອຍ ໂດຍອະທິຖານເປັນເວລາດົນນານ ແລະ ຫຼັງຈາກນັ້ນ ພວກເຈົ້າກໍ່ເຮັດຄືກັບວ່າບໍ່ມີຫຍັງເກີດຂຶ້ນ, ຄືກັບວ່າເຈົ້າເປັນແມ່ເຖົ້າທີ່ຂີ້ຈົ່ມ. ພວກເຈົ້າຜ່ານຜົ້ນຊີວິດຝ່າຍວິນຍານຂອງພວກເຈົ້າໃນລັກສະນະນີ້ ໂດຍບໍ່ໄດ້ເຂົ້າສູ່ຄວາມຈິງຢ່າງແທ້ຈິງທັງສິ້ນ ພ້ອມກັບການປະຕິບັດຫຼາຍຢ່າງທີ່ຜິວເຜີນເກີນໄປ! ການເຂົ້າສູ່ການຝຶກຝົນຢ່າງຕົວຈິງກ່ຽວພັນກັບຊີວິດທີ່ເປັນຈິງຂອງຜູ້ຄົນ ແລະ ຄວາມຫຍຸ້ງຍາກໃນການປະຕິບັດຕົວຈິງຂອງພວກເຂົາ, ນີ້ເປັນວິທີດຽວທີ່ພວກເຂົາປ່ຽນແປງ. ຖ້າປາສະຈາກຊີວິດທີ່ເປັນຈິງ, ຜູ້ຄົນກໍ່ບໍ່ສາມາດໄດ້ຮັບການປ່ຽນແປງ. ການທີ່ພວກເຂົາອະທິຖານແຕ່ປາກຈະມີປະໂຫຍດຫຍັງ? ຖ້າປາສະຈາກຄວາມເຂົ້າໃຈທໍາມະຊາດຂອງມະນຸດແລ້ວ, ທຸກສິ່ງກໍ່ເປັນການເສຍເວລາ ແລະ ຖ້າປາສະຈາກເສັ້ນທາງສໍາລັບການປະຕິບັດ, ທຸກສິ່ງກໍ່ເປັນຄວາມພະຍາຍາມທີ່ສູນເປົ່າ! ຄໍາອະທິຖານປົກກະຕິສາມາດຊ່ວຍໃຫ້ຜູ້ຄົນຮັກສາສະພາວະທີ່ປົກກະຕິຂອງພວກເຂົາຢູ່ພາຍໃນ, ແຕ່ພວກເຂົາບໍ່ສາມາດໄດ້ຮັບການປ່ຽນແປງຢ່າງສິ້ນເຊີງ. ການຮູ້ຈັກຄວາມຄິດຂອງມະນຸດທີ່ຖືວ່າຕົນເອງຊອບທໍາ, ຄວາມຈອງຫອງ, ຄວາມອວດດີ, ຄວາມທະນົງໂຕ ແລະ ການຮູ້ຈັກອຸປະນິໄສທີ່ເສື່ອມຊາມຂອງມະນຸດ, ຄວາມຮູ້ກ່ຽວກັບສິ່ງເຫຼົ່ານີ້ບໍ່ໄດ້ມາຈາກຄໍາອະທິຖານ, ພວກມັນຖືກຄົ້ນພົບໂດຍການຊີມລົດຊາດພຣະທໍາຂອງພຣະເຈົ້າ ແລະ ພວກມັນເປັນທີ່ຮູ້ຈັກຜ່ານແສງສະຫວ່າງຂອງພຣະວິນຍານບໍລິສຸດໃນຊີວິດທີ່ເປັນຈິງ. ທຸກຄົນໃນປັດຈຸບັນສາມາດເວົ້າໄດ້ດີພໍສົມຄວນ ແລະ ພວກເຂົາໄດ້ຟັງຄໍາເທດສະໜາທີ່ສູງສົ່ງທີ່ສຸດ, ສູງສົ່ງກວ່າຄໍາເທດສະໜາອື່ນໆ

ທົ່ວຍຸກຕ່າງໆ ແຕ່ມີພຽງໜ້ອຍດຽວທີ່ຖືກນຳໄປປະຕິບັດຢ່າງແທ້ຈິງໃນຊີວິດທີ່ເປັນຈິງຂອງພວກເຂົາ. ນັ້ນໝາຍຄວາມວ່າ ບໍ່ມີພຣະເຈົ້າໃນຊີວິດທີ່ເປັນຈິງຂອງພວກເຂົາ; ພວກເຂົາບໍ່ມີຊີວິດຂອງຄົນໃໝ່ ຫຼັງຈາກການປ່ຽນແປງ. ພວກເຂົາບໍ່ດຳລົງຊີວິດຕາມຄວາມຈິງໃນຊີວິດທີ່ເປັນຈິງ ຫຼື ພວກເຂົາບໍ່ໄດ້ນຳພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງ. ພວກເຂົາດຳລົງຊີວິດຊີວິດຄືກັບລູກໆຂອງນະຮົກ. ນີ້ບໍ່ແມ່ນການອອກນອກທາງຢ່າງເຫັນໄດ້ງ່າຍບໍ?

ເພື່ອຟື້ນຟູລັກສະນະຂອງຄົນປົກກະຕິ ນັ້ນກໍ່ຄື ເພື່ອບັນລຸຄວາມເປັນມະນຸດທີ່ປົກກະຕິ, ຜູ້ຄົນບໍ່ສາມາດພຽງແຕ່ເຮັດໃຫ້ພຣະເຈົ້າພໍໃຈດ້ວຍຄຳເວົ້າຂອງພວກເຂົາເທົ່ານັ້ນ. ພວກເຂົາພຽງແຕ່ກຳລັງທຳຮ້າຍຕົນເອງໂດຍການເຮັດແບບນັ້ນ ແລະ ມັນບໍ່ໄດ້ນຳຜົນປະໂຫຍດຫຍັງມາສູ່ທາງເຂົ້າ ຫຼື ການປ່ຽນແປງຂອງພວກເຂົາ. ສະນັ້ນ, ເພື່ອບັນລຸການປ່ຽນແປງ, ຜູ້ຄົນຕ້ອງປະຕິບັດເທື່ອລະໜ້ອຍ. ພວກເຂົາຕ້ອງເຂົ້າຢ່າງຊ້າໆ, ສະແຫວງຫາ ແລະ ຄົ້ນຫາເທື່ອລະໜ້ອຍ, ເຂົ້າໄປຂ້າງໃນຈາກຄວາມຄິດບວກ ແລະ ດຳລົງຊີວິດຕາມຄວາມເປັນຈິງ; ຊີວິດຂອງໄພ່ພົນ. ຕັ້ງແຕ່ນີ້ຕໍ່ໄປ, ສິ່ງຕ່າງໆທີ່ເປັນຈິງ, ເຫດການທີ່ເປັນຈິງ ແລະ ສະພາບແວດລ້ອມທີ່ເປັນຈິງປ່ອຍໃຫ້ຜູ້ຄົນມີການຝຶກຝົນຕົວຈິງ. ຜູ້ຄົນບໍ່ຈຳເປັນຕ້ອງເວົ້າແຕ່ປາກ; ກົງກັນຂ້າມ, ພວກເຂົາຕ້ອງຝຶກຝົນໃນສະພາບແວດລ້ອມທີ່ເປັນຈິງ. ຜູ້ຄົນໄດ້ຮັບຮູ້ກ່ອນວ່າ ພວກເຂົາມີຄວາມສາມາດຕໍ່າ ແລະ ຫຼັງຈາກນັ້ນ ພວກເຂົາກໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງເປັນປົກກະຕິ ແລະ ເຂົ້າສູ່ ແລະ ປະຕິບັດຢ່າງເປັນປົກກະຕິເຊັ່ນກັນ; ໃນລັກສະນະນີ້ເທົ່ານັ້ນ ພວກເຂົາຈຶ່ງສາມາດຮັບເອົາຄວາມເປັນຈິງ ແລະ ສິ່ງນີ້ແມ່ນວິທີທີ່ເຮັດໃຫ້ການເຂົ້າສູ່ເກີດຂຶ້ນຢ່າງໄວວາຍິ່ງຂຶ້ນ. ເພື່ອປ່ຽນແປງຜູ້ຄົນ, ຕ້ອງມີການປະຕິບັດຕົວຈິງບາງຢ່າງ; ພວກເຂົາຕ້ອງປະຕິບັດດ້ວຍສິ່ງຕ່າງໆທີ່ເປັນຈິງ, ເຫດການທີ່ເປັນຈິງ ແລະ ສະພາບແວດລ້ອມທີ່ເປັນຈິງ. ຄົນໆໜຶ່ງຈະສາມາດບັນລຸການຝຶກຝົນທີ່ແທ້ຈິງໄດ້ໂດຍການອາໄສຊີວິດຄຣິສຕະຈັກພຽງຢ່າງດຽວໄດ້ບໍ? ຜູ້ຄົນຈະສາມາດເຂົ້າສູ່ຄວາມເປັນຈິງໃນລັກສະນະນີ້ໄດ້ບໍ? ບໍ່! ຖ້າຜູ້ຄົນບໍ່ສາມາດເຂົ້າສູ່ຊີວິດທີ່ເປັນຈິງ, ແລ້ວພວກເຂົາກໍ່ບໍ່ສາມາດປ່ຽນແປງວິຖີຊີວິດເດີມຂອງພວກເຂົາ ແລະ ວິທີການເຮັດສິ່ງຕ່າງໆ. ນີ້ບໍ່ແມ່ນຍ້ອນຄວາມຂີ້ຄ້ານຂອງຜູ້ຄົນ ແລະ ການເພິ່ງພາອາໄສໃນລະດັບສູງ, ແຕ່ກົງກັນຂ້າມ ມັນແມ່ນຍ້ອນຜູ້ຄົນບໍ່ມີຄວາມສາມາດໃນການດຳລົງຊີວິດເລີຍ ແລະ ຍິ່ງໄປກວ່ານັ້ນ ພວກເຂົາບໍ່ມີຄວາມເຂົ້າໃຈກ່ຽວກັບມາດຕະຖານລັກສະນະຂອງຄົນປົກກະຕິ. ໃນອະດີດ, ຜູ້ຄົນລົມ, ເວົ້າ ແລະ ສື່ສານກັນຢູ່ສະເໝີ ແລະ ພວກເຂົາເຖິງກັບກາຍເປັນ “ຜູ້ກ່າວຄຳປາໄສ” ແຕ່ບໍ່ມີພວກເຂົາຈັກຄົນທີ່ສະແຫວງຫາການປ່ຽນແປງໃນຊີວິດ-ອຸປະນິໄສຂອງພວກເຂົາ; ກົງກັນຂ້າມ, ພວກເຂົາສະແຫວງຫາທິດສະດີທີ່ເລິກເຊິ່ງຢ່າງຫຼັບຫູຫຼັບຕາ. ສະນັ້ນ, ຜູ້ຄົນໃນປັດຈຸບັນຕ້ອງປ່ຽນແປງວິຖີຄວາມເຊື່ອແຫ່ງສາສະໜານີ້ໃນພຣະເຈົ້າໃນຊີວິດຂອງພວກເຂົາ. ພວກເຂົາຕ້ອງເຂົ້າສູ່ການປະຕິບັດ ໂດຍແນໃສ່ເຫດການດຽວ, ສິ່ງດຽວ, ຄົນດຽວ. ພວກເຂົາຕ້ອງເຮັດສິ່ງຕ່າງໆດ້ວຍຄວາມເອົາໃຈໃສ່, ແລ້ວເມື່ອນັ້ນເອງ ພວກເຂົາຈຶ່ງຈະສາມາດບັນລຸຜົນໄດ້. ການປ່ຽນແປງຜູ້ຄົນເລີ່ມຕົ້ນດ້ວຍການປ່ຽນແປງແກ່ນແທ້ຂອງພວກເຂົາ. ພາລະກິດຕ້ອງແນໃສ່ແກ່ນແທ້ຂອງຜູ້ຄົນ, ແນໃສ່ຊີວິດຂອງພວກເຂົາ ແລະ ແນໃສ່ຄວາມຂີ້ຄ້ານ,

ການເພິ່ງພາອາໄສ ແລະ ຄວາມເປັນທາດຂອງພວກເຂົາ; ດ້ວຍວິທີນີ້ເທົ່ານັ້ນ ພວກເຂົາຈຶ່ງຈະສາມາດໄດ້ຮັບການປ່ຽນແປງ.

ເຖິງແມ່ນວ່າຊີວິດຄຣິສຕະຈັກຈະສາມາດສ້າງຜົນໃນບາງຂອບເຂດ, ກະແຈທີ່ສຳຄັນກໍ່ຄືຊີວິດທີ່ເປັນຈິງສາມາດປ່ຽນແປງຜູ້ຄົນໄດ້ອີກດ້ວຍ. ທຳມະຊາດເດີມຂອງຄົນໆໜຶ່ງບໍ່ສາມາດໄດ້ຮັບການປ່ຽນແປງໂດຍປາສະຈາກຊີວິດທີ່ເປັນຈິງ. ໃຫ້ພວກເຮົາຍົກຕົວຢ່າງພາລະກິດຂອງພຣະເຢຊູໃນລະຫວ່າງຍຸກແຫ່ງພຣະຄຸນ. ເມື່ອພຣະເຢຊູລົບລ້າງພຣະບັນຍັດກ່ອນໜ້ານັ້ນ ແລະ ສ້າງຕັ້ງພຣະບັນຍັດແຫ່ງຍຸກໃໝ່, ພຣະອົງກ່າວໂດຍໃຊ້ຕົວຢ່າງທີ່ແທ້ຈິງຈາກຊີວິດທີ່ເປັນຈິງ. ເມື່ອພຣະເຢຊູນຳພາສາວົກຂອງພຣະອົງຜ່ານທົ່ງນາໃນວັນຊະບາໂຕ, ສາວົກຂອງພຣະອົງຫິວເຂົ້າ ແລະ ເດັດຮວງເຂົ້າກິນ. ພວກຟາຣິຊາຍເຫັນສິ່ງນີ້ ແລະ ເວົ້າວ່າພວກເຂົາບໍ່ໄດ້ຮັກສາວັນຊະບາໂຕເລີຍ. ພວກເຂົາຍັງເວົ້າວ່າ ຜູ້ຄົນບໍ່ໄດ້ຮັບອະນຸຍາດໃຫ້ຊ່ວຍລູກງົວທີ່ຕົກລົງຂຸມໃນວັນຊະບາໂຕ ໂດຍກ່າວວ່າບໍ່ມີການປະຕິບັດວຽກງານໃດໆໃນລະຫວ່າງວັນຊະບາໂຕ. ພຣະເຢຊູອ້າງເຫດການເຫຼົ່ານີ້ເພື່ອປະກາດໃຊ້ພຣະບັນຍັດແຫ່ງຍຸກໃໝ່ເທື່ອລະໜ້ອຍ. ໃນເວລານັ້ນ, ພຣະອົງໃຊ້ສິ່ງທີ່ເປັນຈິງຫຼາຍຢ່າງເພື່ອຊ່ວຍໃຫ້ຜູ້ຄົນເຂົ້າໃຈ ແລະ ປ່ຽນແປງ. ນີ້ແມ່ນຫຼັກການທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດຂອງພຣະອົງ ແລະ ມັນເປັນວິທີດຽວທີ່ສາມາດປ່ຽນແປງຜູ້ຄົນໄດ້. ຖ້າບໍ່ມີສິ່ງທີ່ເປັນຈິງແລ້ວ, ຜູ້ຄົນພຽງແຕ່ສາມາດໄດ້ຮັບຄວາມເຂົ້າໃຈທີ່ເປັນທິດສະດີ ແລະ ສະຕິປັນຍາ, ນີ້ບໍ່ແມ່ນວິທີທີ່ມີປະສິດຕິພາບໃນການປ່ຽນແປງ. ສະນັ້ນ ຄົນໆໜຶ່ງຈະຮັບເອົາສະຕິປັນຍາ ແລະ ຄວາມເຂົ້າໃຈຜ່ານການຝຶກຝົນໄດ້ແນວໃດ? ຜູ້ຄົນຈະສາມາດຮັບສະຕິປັນຍາ ແລະ ຄວາມເຂົ້າໃຈຈາກການຟັງ, ການອ່ານ ແລະ ການພັດທະນາຄວາມຮູ້ຂອງເຂົາພຽງຢ່າງດຽວບໍ? ມັນເປັນແບບນີ້ໄດ້ແນວໃດ? ຜູ້ຄົນຕ້ອງເຂົ້າໃຈ ແລະ ຜະເຊີນໃນຊີວິດຈິງ! ສະນັ້ນ, ຄົນໆໜຶ່ງຕ້ອງຝຶກຝົນ ແລະ ຄົນໆໜຶ່ງຕ້ອງບໍ່ອອກຈາກຊີວິດທີ່ເປັນຈິງໄດ້. ຜູ້ຄົນຕ້ອງເອົາໃຈໃສ່ກັບລັກສະນະທີ່ແຕກຕ່າງກັນ ແລະ ມີການເຂົ້າສູ່ຫຼາຍລັກສະນະທີ່ແຕກຕ່າງ: ລະດັບການສຶກສາ, ການສະແດງອອກ, ຄວາມສາມາດເບິ່ງເຫັນສິ່ງຕ່າງໆ, ການແຍກແຍະ, ຄວາມສາມາດເຂົ້າໃຈພຣະທຳຂອງພຣະເຈົ້າ, ສາມັນສຳນຶກ ແລະ ກົດເກນຂອງຄວາມເປັນມະນຸດ ແລະ ສິ່ງອື່ນໆທີ່ກ່ຽວຂ້ອງກັບຄວາມເປັນມະນຸດທີ່ຜູ້ຄົນຕ້ອງປະກອບມີ. ຫຼັງຈາກທີ່ໄດ້ບັນລຸຄວາມເຂົ້າໃຈແລ້ວ, ຜູ້ຄົນຕ້ອງເອົາໃຈໃສ່ໃນທາງເຂົ້າ ແລະ ມີພຽງເມື່ອນັ້ນເອງ ການປ່ຽນແປງຈຶ່ງຈະສາມາດບັນລຸຜົນໄດ້. ຖ້າຄົນໃດໜຶ່ງໄດ້ຮັບຄວາມເຂົ້າໃຈ ແຕ່ພວກເຂົາເບິ່ງຂ້າມການປະຕິບັດ, ການປ່ຽນແປງຈະເກີດຂຶ້ນໄດ້ແນວໃດ? ໃນປັດຈຸບັນນີ້, ຜູ້ຄົນໄດ້ເຂົ້າໃຈຫຼາຍສິ່ງ, ແຕ່ພວກເຂົາບໍ່ໄດ້ໃຊ້ຊີວິດຕາມຄວາມເປັນຈິງ; ສະນັ້ນພວກເຂົາຈຶ່ງມີຄວາມເຂົ້າໃຈຢ່າງແທ້ຈິງພຽງເລັກນ້ອຍກ່ຽວກັບພຣະທຳຂອງພຣະເຈົ້າ. ເຈົ້າໄດ້ຮັບແສງສະຫວ່າງພຽງເລັກນ້ອຍເທົ່ານັ້ນ; ເຈົ້າໄດ້ຮັບແສງເຍືອງທາງພຽງເລັກນ້ອຍຈາກພຣະວິນຍານບໍລິສຸດ, ແຕ່ເຈົ້າບໍ່ມີທາງເຂົ້າສູ່ຊີວິດທີ່ເປັນຈິງ ຫຼື ເຈົ້າອາດຈະບໍ່ສົນໃຈກ່ຽວກັບທາງເຂົ້າ, ສະນັ້ນ ການປ່ຽນແປງຂອງເຈົ້າຈຶ່ງຫຼຸດລົງ. ຫຼັງຈາກເວລາທີ່ຍາວນານນັ້ນ, ຜູ້ຄົນກໍ່ເຂົ້າໃຈຫຼາຍຢ່າງ. ພວກເຂົາສາມາດເວົ້າຫຼາຍຢ່າງກ່ຽວກັບຄວາມຮູ້ຂອງພວກເຂົາໃນທິດສະດີ, ແຕ່ອຸປະນິໄສພາຍນອກຂອງພວກເຂົາຍັງຄົງ

ເປັນຄືເກົ່າ ແລະ ຄວາມສາມາດເດີມຂອງພວກເຂົາກໍ່ຍັງເປັນຄືກັບທີ່ມັນເຄີຍເປັນ, ບໍ່ກ້າວໜ້າແມ່ນແຕ່ໜ້ອຍດຽວ. ຖ້າເປັນເຊັ່ນນີ້, ແລ້ວເມື່ອໃດເຈົ້າຈຶ່ງຈະໄດ້ເຂົ້າໃນທີ່ສຸດ?

ຊີວິດຄຣິສຕະຈັກເປັນພຽງຊີວິດປະເພດໜຶ່ງທີ່ຜູ້ຄົນເຕົ້າໂຮມກັນເພື່ອຊີມລົດຊາດພຣະທຳຂອງພຣະເຈົ້າ ແລະ ມັນປະກອບເປັນພຽງເສດສ່ວນເລັກນ້ອຍໃນຊີວິດຂອງຄົນໆໜຶ່ງ. ຖ້າຊີວິດທີ່ເປັນຈິງຂອງຜູ້ຄົນສາມາດເປັນເໝືອນກັບຊີວິດຄຣິສຕະຈັກຂອງເຂົາອີກດ້ວຍ ເຊິ່ງລວມເຖິງຊີວິດຝ່າຍວິນຍານທີ່ປົກກະຕິ, ການຊີມລົດຊາດພຣະທຳຂອງພຣະເຈົ້າຢ່າງເປັນປົກກະຕິ, ການອະທິຖານ ແລະ ການໃກ້ຊິດກັບພຣະເຈົ້າຢ່າງເປັນປົກກະຕິ, ການດຳລົງຊີວິດທີ່ເປັນຈິງ ເຊິ່ງທຸກສິ່ງຖືກປະຕິບັດຕາມຄວາມປະສົງຂອງພຣະເຈົ້າ, ການດຳລົງຊີວິດທີ່ເປັນຈິງ ເຊິ່ງທຸກສິ່ງຖືກປະຕິບັດຕາມຄວາມຈິງ, ການດຳລົງຊີວິດທີ່ເປັນຈິງແຫ່ງການປະຕິບັດການອະທິຖານ ແລະ ການສະຫງົບລົງຕໍ່ໜ້າພຣະເຈົ້າ, ການຮ້ອງເພງສັນລະເສີນ ແລະ ການເຕັ້ນລຳ, ມີພຽງແຕ່ສິ່ງນີ້ຈຶ່ງເປັນພຽງຊີວິດປະເພດທີ່ຈະນຳພວກເຂົາເຂົ້າສູ່ຊີວິດແຫ່ງພຣະທຳຂອງພຣະເຈົ້າໄດ້. ຄົນສ່ວນໃຫຍ່ພຽງແຕ່ໃສ່ໃຈກັບເວລາຫຼາຍຊົ່ວໂມງໃນຊີວິດຄຣິສຕະຈັກຂອງພວກເຂົາ ໂດຍບໍ່ມີ "ການໃສ່ໃຈ" ກັບຊີວິດທີ່ຢູ່ນອກຊົ່ວໂມງເຫຼົ່ານັ້ນ, ເໝືອນກັບວ່າພວກເຂົາບໍ່ສົນໃຈມັນເລີຍ. ຍັງມີຫຼາຍຄົນທີ່ເຂົ້າສູ່ຊີວິດຂອງໄພ່ພົນ ເມື່ອກຳລັງກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຮ້ອງເພງສັນລະເສີນ ຫຼື ອະທິຖານ ແລະ ຫຼັງຈາກນັ້ນ ພວກເຂົາກໍ່ກັບຄືນສູ່ຕົວຕົນເດີມຂອງພວກເຂົາທີ່ຢູ່ນອກເວລາເຫຼົ່ານັ້ນ. ການດຳລົງຊີວິດແບບນີ້ບໍ່ສາມາດປ່ຽນແປງຜູ້ຄົນໄດ້, ແຮງໄກທີ່ຈະເຮັດໃຫ້ພວກເຂົາຮູ້ຈັກພຣະເຈົ້າ. ໃນການເຊື່ອໃນພຣະເຈົ້າ, ຖ້າມະນຸດປາຖະໜາການປ່ຽນແປງໃນອຸປະນິໄສຂອງພວກເຂົາ ແລ້ວພວກເຂົາຕ້ອງບໍ່ແຍກຕົນເອງອອກຈາກຊີວິດທີ່ເປັນຈິງ. ໃນຊີວິດທີ່ເປັນຈິງ, ເຈົ້າຕ້ອງຮູ້ຈັກຕົນເອງ, ປະຖິ້ມຕົນເອງ, ປະຕິບັດຄວາມຈິງ ພ້ອມທັງຮຽນຮູ້ຫຼັກການ, ສາມັນສຳນຶກ ແລະ ກົດເກນແຫ່ງການປະພຶດຕົນໃນທຸກສິ່ງກ່ອນທີ່ເຈົ້າຈະສາມາດບັນລຸການປ່ຽນແປງເທື່ອລະໜ້ອຍ. ຖ້າເຈົ້າພຽງແຕ່ໃສ່ໃຈກັບຄວາມຮູ້ໃນທາງທິດສະດີ ແລະ ພຽງແຕ່ດຳລົງຊີວິດທ່າມກາງພິທີກຳທາງສາສະໜາ ໂດຍບໍ່ລົງເລິກໃນຄວາມເປັນຈິງ, ໂດຍບໍ່ມີການເຂົ້າສູ່ຊີວິດທີ່ເປັນຈິງ ແລ້ວເຈົ້າກໍ່ຈະບໍ່ໄດ້ເຂົ້າສູ່ຄວາມເປັນຈິງຈັກເທື່ອ, ເຈົ້າຈະບໍ່ຮູ້ຈັກຕົນເອງ, ຄວາມຈິງ ຫຼື ພຣະເຈົ້າຈັກເທື່ອ ແລະ ເຈົ້າຈະເປັນຄົນຕາບອດ ແລະ ໂງ່ຈ້າຢູ່ສະເໝີ. ພາລະກິດແຫ່ງການຊ່ວຍຜູ້ຄົນໃຫ້ລອດພົ້ນຂອງພຣະເຈົ້າບໍ່ແມ່ນເພື່ອເຮັດໃຫ້ພວກເຂົາດຳລົງຊີວິດມະນຸດທີ່ປົກກະຕິຫຼັງຈາກຊ່ວງເວລາສັ້ນໆ ຫຼື ມັນບໍ່ແມ່ນເພື່ອປ່ຽນແປງແນວຄິດ ແລະ ຫຼັກຄຳສອນທີ່ຜິດພາດຂອງພວກເຂົາ. ກົງກັນຂ້າມ ຈຸດປະສົງຂອງພຣະອົງແມ່ນເພື່ອປ່ຽນແປງອຸປະນິໄສເດີມຂອງຜູ້ຄົນ, ປ່ຽນແປງວິທີການທັງໝົດທີ່ເດີມໆໃນຊີວິດຂອງພວກເຂົາ ແລະ ປ່ຽນແປງວິທີການຄິດ ແລະ ທັດສະນະທາງຄວາມຄິດທີ່ຫຼ້າສະໄໝຂອງເຂົາ. ການໃສ່ໃຈກັບຊີວິດຄຣິສຕະຈັກແຕ່ພຽງຢ່າງດຽວຈະບໍ່ປ່ຽນແປງນິໄສເດີມໃນຊີວິດຂອງມະນຸດ ຫຼື ປ່ຽນແປງວິທີທີ່ພວກເຂົາດຳລົງຊີວິດເປັນເວລາດົນນານ. ບໍ່ວ່າຫຍັງກໍຕາມ, ຜູ້ຄົນຕ້ອງບໍ່ອອກຈາກຊີວິດທີ່ເປັນຈິງ. ພຣະເຈົ້າຮຽກຮ້ອງໃຫ້ຜູ້ຄົນດຳລົງຊີວິດດ້ວຍຄວາມເປັນມະນຸດທີ່ປົກກະຕິໃນຊີວິດທີ່ເປັນຈິງ, ບໍ່ແມ່ນແຕ່ໃນຊີວິດຄຣິສຕະຈັກ; ພວກເຂົາດຳລົງຊີວິດຕາມຄວາມຈິງໃນຊີວິດທີ່ເປັນຈິງ,

ບໍ່ແມ່ນແຕ່ໃນຊີວິດຄຣິສຕະຈັກ; ແລະ ພວກເຂົາປະຕິບັດໜ້າທີ່ຂອງພວກເຂົາໃນຊີວິດທີ່ເປັນຈິງ, ບໍ່ແມ່ນແຕ່ໃນຊີວິດຄຣິສຕະຈັກ. ເພື່ອເຂົ້າສູ່ຄວາມເປັນຈິງ, ຄົນໆໜຶ່ງຕ້ອງຫັນທຸກສິ່ງມາສູ່ຊີວິດທີ່ເປັນຈິງ. ໃນການເຊື່ອໃນພຣະເຈົ້າ, ຖ້າຜູ້ຄົນບໍ່ສາມາດມາຮູ້ຈັກຕົນເອງຜ່ານທາງເຂົ້າສູ່ຊີວິດທີ່ເປັນຈິງ ແລະ ຖ້າພວກເຂົາບໍ່ສາມາດດຳລົງຊີວິດຕາມຄວາມເປັນມະນຸດທີ່ປົກກະຕິໃນຊີວິດຈິງ, ແລ້ວພວກເຂົາກໍ່ຈະກາຍເປັນຄົນລົ້ມເຫຼວ. ຄົນທີ່ບໍ່ເຊື່ອຟັງພຣະເຈົ້າລ້ວນແລ້ວແຕ່ເປັນຄົນທີ່ບໍ່ສາມາດເຂົ້າສູ່ຊີວິດທີ່ເປັນຈິງ. ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ເວົ້າເຖິງຄວາມເປັນມະນຸດ ແຕ່ດຳລົງຊີວິດຕາມທຳມະຊາດຂອງຜີຮ້າຍ. ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ເວົ້າເຖິງຄວາມຈິງ, ແຕ່ດຳລົງຊີວິດຕາມຫຼັກຄຳສອນແທນ. ຄົນທີ່ບໍ່ສາມາດດຳລົງຊີວິດຕາມຄວາມຈິງໃນຊີວິດທີ່ເປັນຈິງແມ່ນຄົນທີ່ເຊື່ອໃນພຣະເຈົ້າ ແຕ່ຖືກພຣະອົງກຽດຊັງ ແລະ ປະຕິເສດ. ເຈົ້າຕ້ອງປະຕິບັດການເຂົ້າສູ່ຊີວິດທີ່ເປັນຈິງ, ຮູ້ຈັກຂໍ້ບົກຜ່ອງ, ຄວາມບໍ່ເຊື່ອຟັງ ແລະ ຄວາມໂງ່ຈ້າຂອງເຈົ້າເອງ ແລະ ຮູ້ຈັກຄວາມເປັນມະນຸດທີ່ບໍ່ປົກກະຕິ ແລະ ຄວາມອ່ອນແອຂອງເຈົ້າ. ດ້ວຍວິທີນັ້ນ, ຄວາມຮູ້ທັງໝົດຂອງເຈົ້າຈະໄດ້ປະກອບເຂົ້າສູ່ສະຖານະການ ແລະ ຄວາມຫຍຸ້ງຍາກຕົວຈິງຂອງເຈົ້າ. ມີແຕ່ຄວາມຮູ້ປະເພດນີ້ເທົ່ານັ້ນຈຶ່ງເປັນຈິງ ແລະ ສາມາດເຮັດໃຫ້ເຈົ້າເຂົ້າໃຈສະພາບການຂອງເຈົ້າເອງຢ່າງແທ້ຈິງ ແລະ ບັນລຸການປ່ຽນແປງໃນອຸປະນິໄສ.

ບັດນີ້ ເມື່ອການເຮັດໃຫ້ຜູ້ຄົນສົມບູນໄດ້ເລີ່ມຕົ້ນຢ່າງເປັນທາງການແລ້ວ, ເຈົ້າຕ້ອງເຂົ້າສູ່ຊີວິດທີ່ເປັນຈິງ. ສະນັ້ນ, ເພື່ອທີ່ຈະບັນລຸການປ່ຽນແປງ, ເຈົ້າຕ້ອງເລີ່ມຕົ້ນຈາກການເຂົ້າສູ່ຊີວິດທີ່ເປັນຈິງ ແລະ ປ່ຽນແປງເທື່ອລະໜ້ອຍ. ຖ້າເຈົ້າຫຼີກເວັ້ນຊີວິດປົກກະຕິຂອງມະນຸດ ແລະ ມີແຕ່ເວົ້າກ່ຽວກັບບັນຫາຝ່າຍວິນຍານເທົ່ານັ້ນ, ແລ້ວສິ່ງຕ່າງໆກໍ່ຈະເປັນຕາໜ້າເບື່ອ ແລະ ບໍ່ເປັນຕາສົນໃຈ; ພວກມັນກໍ່ກາຍເປັນສິ່ງທີ່ບໍ່ເປັນຈິງ ແລະ ຫຼັງຈາກນັ້ນ ຜູ້ຄົນຈະສາມາດປ່ຽນແປງໄດ້ແນວໃດ? ບັດນີ້ ເຈົ້າຖືກສັ່ງໃຫ້ເຂົ້າສູ່ຊີວິດທີ່ເປັນຈິງເພື່ອປະຕິບັດ, ເພື່ອສ້າງຕັ້ງພື້ນຖານໃນການເຂົ້າສູ່ປະສົບການທີ່ແທ້ຈິງ. ນີ້ແມ່ນລັກສະນະໜຶ່ງຂອງສິ່ງທີ່ຜູ້ຄົນຕ້ອງເຮັດ. ພາລະກິດຂອງພຣະວິນຍານບໍລິສຸດແມ່ນເພື່ອນຳພາເປັນຫຼັກ, ໃນຂະນະທີ່ສ່ວນທີ່ເຫຼືອແມ່ນຂຶ້ນຢູ່ກັບການປະຕິບັດ ແລະ ທາງເຂົ້າຂອງຜູ້ຄົນ. ທຸກຄົນອາດບັນລຸການເຂົ້າສູ່ຊີວິດທີ່ເປັນຈິງຜ່ານເສັ້ນທາງທີ່ແຕກຕ່າງກັນ ຈົນພວກເຂົາສາມາດນຳພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງໄດ້ ແລະ ດຳລົງຊີວິດຕາມຄວາມເປັນມະນຸດປົກກະຕິຢ່າງແທ້ຈິງ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນຊີວິດທີ່ມີຄວາມໝາຍ!

# ສຳລັບທຸກຄົນທີ່ປະຕິບັດໜ້າທີ່ຂອງຕົນ

ໃນກະແສປັດຈຸບັນ ທຸກຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ ມີໂອກາດທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ບໍ່ວ່າພວກເຂົາຈະໜຸ່ມ ຫຼື ເຖົ້າກໍຕາມ ຕາບໃດທີ່ພວກເຂົາໃຫ້ຄວາມເຄົາລົບຕໍ່ພຣະເຈົ້າ ແລະ ເຊື່ອຟັງພຣະອົງ, ພວກເຂົາກໍຈະສາມາດຖືກເຮັດໃຫ້ສົມບູນໂດຍພຣະອົງ. ພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນໂດຍອີງຕາມພາລະໜ້າທີ່ ທີ່ແຕກຕ່າງກັນຂອງພວກເຂົາ. ຕາບໃດທີ່ເຈົ້າໄດ້ປະຕິບັດທຸກສິ່ງທຸກຢ່າງດ້ວຍສຸດກຳລັງຂອງເຈົ້າ ແລະ ຖວາຍຕົນຕໍ່ພາລະກິດຂອງພຣະເຈົ້າ, ເຈົ້າກໍຈະສາມາດຖືກເຮັດໃຫ້ສົມບູນໄດ້ ໂດຍພຣະອົງ. ໃນປັດຈຸບັນ ພວກເຈົ້າຍັງບໍ່ມີໃຜທີ່ສົມບູນແບບ. ບາງຄັ້ງພວກເຈົ້າກໍສາມາດເຮັດໄດ້ໜ້າທີ່ດຽວ ແລະ ບາງຄັ້ງພວກເຈົ້າກໍເຮັດໄດ້ສອງໜ້າທີ່; ຕາບໃດທີ່ພວກເຈົ້າເຮັດສຸດກຳລັງຂອງຕົນ ເພື່ອທຸ້ມເທໃຫ້ກັບພຣະເຈົ້າ, ສຸດທ້າຍແລ້ວ ພວກເຈົ້າກໍຈະຖືກເຮັດໃຫ້ສົມບູນ ໂດຍພຣະອົງ.

ຄົນໄວໜຸ່ມ ມີປັດຊະຍາຊີວິດໜ້ອຍກວ່າ ແລະ ຂາດສະຕິປັນຍາ ແລະ ຄວາມເຂົ້າໃຈອັນເລິກເຊິ່ງ. ພຣະເຈົ້າມາເພື່ອເຮັດໃຫ້ສະຕິປັນຍາ ແລະ ຄວາມເຂົ້າໃຈອັນເລິກເຊິ່ງຂອງມະນຸດມີຄວາມສົມບູນ ແລະ ພຣະທຳຂອງພຣະເຈົ້າ ທົດແທນສິ່ງເຫຼົ່ານີ້ ທີ່ພວກເຂົາຂາດເຂີນ. ແນວໃດກໍຕາມ, ນິໄສຂອງຄົນໄວໜຸ່ມຍັງບໍ່ສະຖຽນ ແລະ ຍັງຈຳເປັນຕ້ອງມີການປະຕິຮູບໂດຍພຣະເຈົ້າ. ຄົນໄວໜຸ່ມມີຄວາມເຊື່ອທາງສາສະໜາໜ້ອຍລົງ ແລະ ມີປັດຊະຍາຊີວິດໜ້ອຍລົງ. ພວກເຂົາຄິດໃນທາງທີ່ງ່າຍດາຍ ແລະ ການພິຈາລະນາຂອງພວກເຂົາກໍບໍ່ສະລັບຊັບຊ້ອນ. ນີ້ແມ່ນດ້ານທີ່ ຄວາມເປັນມະນຸດຂອງພວກເຂົາຍັງບໍ່ເຂົ້າຮູບເຂົ້າຊົງ ແລະ ມັນເປັນດ້ານທີ່ເພິ່ງປາດຖະໜາ, ແຕ່ຄົນໄວໜຸ່ມພັດປະຕິເສດ ແລະ ຂາດສະຕິປັນຍາ ແລະ ນີ້ກໍແມ່ນຂົງເຂດທີ່ ຈຳເປັນຕ້ອງເຮັດໃຫ້ສົມບູນໂດຍພຣະເຈົ້າ. ຜ່ານການເຮັດໃຫ້ສົມບູນໂດຍພຣະເຈົ້າ, ພວກເຈົ້າອາດຈະພັດທະນາຄວາມເຂົ້າໃຈ ແລະ ສາມາດເຂົ້າໃຈໄດ້ຢ່າງຈະແຈ້ງຕໍ່ຫລາຍໆສິ່ງທາງຈິດວິນຍານໄດ້ ແລະ ຄ່ອຍໆກາຍເປັນຜູ້ທີ່ເໝາະສົມກັບພຣະເຈົ້າທີ່ຈະນຳໃຊ້. ພວກອ້າຍ ແລະ ເອື້ອຍກໍສາມາດປະຕິບັດໜ້າທີ່ບາງຢ່າງ ແລະ ພວກເຂົາກໍບໍ່ຖືກພຣະເຈົ້າປະປ່ອຍ. ໂດຍທີ່ພວກອ້າຍ ແລະ ເອື້ອຍ ກໍລ້ວນແຕ່ມີດ້ານທີ່ເພິ່ງປາດຖະໜາ ແລະ ດ້ານທີ່ບໍ່ເພິ່ງປາດຖະໜາ. ພວກອ້າຍ ແລະ ເອື້ອຍມີປັດຊະຍາຊີວິດຫຼາຍກວ່າ, ພວກເຂົາມີຄວາມເຊື່ອທາງສາສະໜາຫລາຍກວ່າ, ການກະທຳຂອງພວກເຂົາ ລ້ວນຍຶດຕິດຢູ່ໃນກອບ, ພວກເຂົາປະຕິບັດຕາມກົດລະບຽບ ແບບອັດຕະໂນມັດ, ພວກເຂົານຳໃຊ້ຢ່າງເປັນລະບົບ ແລະ ພວກເຂົາບໍ່ຕິລົບທົບໄດ້. ນີ້ບໍ່ແມ່ນດ້ານທີ່ເພິ່ງປາດຖະໜາ. ແນວໃດກໍຕາມ, ພວກອ້າຍ ແລະ ເອື້ອຍເປັນຄົນໃຈເຢັນ ແລະ ເກັບກ່ຽວເອົາທຸກສິ່ງທີ່ປາກົດຂຶ້ນ; ອຸປະນິໄສຂອງພວກເຂົາໝັ້ນທ່ຽງ ແລະ ພວກເຂົາບໍ່ມີອາລົມທີ່ປັ່ນປ່ວນ. ພວກເຂົາຍອມຮັບເອົາສິ່ງຕ່າງໆຢ່າງຊ້າໆ, ແຕ່ນີ້ບໍ່ແມ່ນຂໍ້ຜິດພາດທີ່ໃຫຍ່ຫຼວງ. ຕາບໃດທີ່ພວກເຈົ້າຍັງສາມາດຖວາຍຕົວ ແລະ ຍອມຮັບເອົາພຣະທຳໃນປັດຈຸບັນຂອງພຣະເຈົ້າໄດ້, ຖ້າຫາກພວກເຈົ້າບໍ່ກັ່ນຕອງພຣະທຳຂອງພຣະເຈົ້າ, ຖ້າຫາກພວກເຈົ້າບໍ່ລັງເລທີ່ຈະຖວາຍຕົນ ແລະ ປະຕິບັດຕາມ ແລະ ຈະບໍ່ວ່າດ້ວຍທາງໃດ ຖ້າພວກເຈົ້າຫາກບໍ່ຜ່ານການຕັດສິນ ຫລື ມີຄວາມຄິດອື່ນທີ່ຊົ່ວຊ້າ ແລະ ຖ້າຫາກ

ພວກເຈົ້າຍອມຮັບເອົາພຣະທຳຂອງພຣະອົງ ແລະ ນຳໄປປະຕິບັດໃນຕົວຈິງ, ຖ້າຫາກພວກເຈົ້າປະຕິບັດໄດ້ຕາມເງື່ອນໄຂເຫຼົ່ານີ້ ພວກເຈົ້າກໍຈະສາມາດຖືກເຮັດໃຫ້ສົມບູນໄດ້.

ບໍ່ວ່າພວກເຈົ້າຈະເປັນນ້ອງ ຫລື ເປັນອ້າຍ ຫລື ເປັນເອື້ອຍ, ພວກເຈົ້າຮູ້ໜ້າທີ່ ທີ່ຕົນຄວນປະຕິບັດ. ພວກທີ່ຢູ່ໃນໄວໜຸ່ມຈະບໍ່ອວດດີ; ພວກທີ່ແກ່ກວ່າ ກໍ່ບໍ່ເສີຍເມີຍ ແລະ ຖອຍຫລັງ. ພວກເຂົາສາມາດນຳໃຊ້ຈຸດແຂງຂອງກັນລະກັນ ເພື່ອແກ້ໄຂຈຸດອ່ອນຂອງຕົນ ແລະ ພວກເຂົາສາມາດຮັບໃຊ້ຊຶ່ງກັນແລະກັນ ໂດຍບໍ່ມີອະຄະຕິໃດໆ. ສະພານມິດຕະພາບໄດ້ຖືກສ້າງຂຶ້ນລະຫວ່າງພວກນ້ອງໆ ແລະ ພວກອ້າຍເອື້ອຍ ແລະ ຍ້ອນຄວາມຮັກຂອງພຣະເຈົ້າ ພວກເຈົ້າຈຶ່ງສາມາດເຂົ້າໃຈຊຶ່ງກັນ ແລະ ກັນໄດ້ດີຂຶ້ນ. ນ້ອງຊາຍ ແລະ ນ້ອງສາວບໍ່ດູຖູກພວກອ້າຍໆ ແລະ ເອື້ອຍໆ ແລະ ພວກອ້າຍໆ ແລະ ເອື້ອຍໆກໍບໍ່ຖືວ່າຕົນເອງຊອບທຳ. ສິ່ງນີ້ ບໍ່ມີການຮ່ວມມືທີ່ກົມກຽວກັນບໍ່? ຖ້າພວກເຈົ້າທຸກຄົນມີຄວາມເດັດດ່ຽວເຊັ່ນນັ້ນ, ແລ້ວຄວາມປະສົງຂອງພຣະເຈົ້າກໍຈະສຳເລັດໃນຮຸ່ນຄົນຂອງພວກເຈົ້າຢ່າງແນ່ນອນ.

ໃນອະນາຄົດ ບໍ່ວ່າເຈົ້າຈະໄດ້ຮັບພອນ ຫລື ຖືກສາບແຊ່ງ ກໍຈະຖືກຕັດສິນຕາມການກະທຳທີ່ພວກເຈົ້າໄດ້ປະຕິບັດໃນມື້ນີ້. ຖ້າຫາກພວກເຈົ້າຕ້ອງຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ມັນກໍຕ້ອງເກີດຂຶ້ນດຽວນີ້ ໃນຍຸກສະໄໝນີ້; ຍັງບໍ່ມີໂອກາດອື່ນອີກ ໃນອະນາຄົດ. ຕອນນີ້, ພຣະເຈົ້າຕ້ອງການເຮັດໃຫ້ພວກເຈົ້າສົມບູນຢ່າງແທ້ຈິງ ແລະ ນີ້ບໍ່ແມ່ນວິທີການເວົ້າ. ໃນອະນາຄົດ, ບໍ່ວ່າຈະເກີດການທົດລອງຢ່າງໃດກັບພວກເຈົ້າ, ຈະເກີດເຫດການຫຍັງຂຶ້ນ ຫຼື ເກີດໄພພິບັດອັນໃດກັບພວກເຈົ້າ ພຣະເຈົ້າຕ້ອງການເຮັດໃຫ້ພວກເຈົ້າສົມບູນ, ນີ້ແມ່ນຄວາມຈິງທີ່ເດັດຂາດ ແລະ ບໍ່ມີຂໍ້ສົງໃສ. ສິ່ງນີ້ຈະເຫັນໄດ້ຈາກໃສ? ຈາກຄວາມຈິງທີ່ວ່າ ພຣະທຳຂອງພຣະເຈົ້າຜ່ານຍຸກ ແລະ ສະໄໝທີ່ບໍ່ເຄີຍບັນລຸໃນລະດັບສູງຫລາຍຄືດັ່ງທີ່ມີໃນທຸກມື້ນີ້ ເຊິ່ງມັນໄດ້ເຂົ້າເຖິງຂອບເຂດສູງສຸດ ແລະ ພາລະກິດຂອງພຣະວິນຍານບໍລິສຸດໃນທ່າມກາງມະນຸດທັງປວງ ປັດຈຸບັນແມ່ນບໍ່ເຄີຍເກີດຂຶ້ນມາກ່ອນ. ຄົນໃນສະໄໝຜ່ານມາບໍ່ມີໃຜທີ່ໄດ້ສຳຜັດກັບສິ່ງນີ້. ແມ່ນແຕ່ຢູ່ໃນຍຸກແຫ່ງພຣະເຢຊູກໍບໍ່ໄດ້ມີການເປີດເຜີຍຄືກັບໃນປັດຈຸບັນ; ພຣະທຳທີ່ໄດ້ກ່າວຕໍ່ພວກເຈົ້າໄດ້ບັນລຸເຖິງຂັ້ນສູງສຸດ, ທຸກສິ່ງທີ່ພວກເຈົ້າເຂົ້າໃຈ ແລະ ທຸກສິ່ງທີ່ພວກເຈົ້າໄດ້ພະເຊີນ. ພວກເຈົ້າບໍ່ໄດ້ໜີໄປ ໃນລະຫວ່າງການທົດລອງ ແລະ ການຕີສອນ, ສິ່ງນີ້ ພຽງພໍແລ້ວທີ່ຈະພິສູດວ່າ ພາລະກິດຂອງພຣະເຈົ້າໄດ້ບັນລຸເຖິງຈຸດຍິ່ງໃຫຍ່ທີ່ບໍ່ເຄີຍມີມາກ່ອນ. ນີ້ບໍ່ແມ່ນສິ່ງທີ່ມະນຸດຈະສາມາດເຮັດໄດ້ ແລະ ມັນບໍ່ແມ່ນບາງສິ່ງທີ່ມະນຸດຮັກສາໄວ້ໄດ້, ແຕ່ມັນແມ່ນພາລະກິດຂອງພຣະເຈົ້າເອງ. ດັ່ງນັ້ນ, ຈາກຄວາມຈິງຫຼາຍຢ່າງໃນພາລະກິດຂອງພຣະເຈົ້າສາມາດເຫັນໄດ້ວ່າ ພຣະເຈົ້າຕ້ອງການເຮັດໃຫ້ມະນຸດສົມບູນ ແລະ ແນ່ນອນວ່າ ພຣະອົງສາມາດເຮັດໃຫ້ພວກເຈົ້າສົມບູນໄດ້. ຖ້າຫາກພວກເຈົ້າສາມາດເຫັນໃນສິ່ງນີ້ໄດ້, ຖ້າຫາກພວກເຈົ້າສາມາດມີການຄົ້ນພົບສິ່ງໃໝ່ນີ້ໄດ້ ແລ້ວພວກເຈົ້າຈະບໍ່ລໍຖ້າການກັບມາຄັ້ງທີສອງຂອງພຣະເຢຊູ, ແຕ່ພວກເຈົ້າຈະອະນຸຍາດໃຫ້ພຣະເຈົ້າເຮັດໃຫ້ພວກເຈົ້າສົມບູນຢູ່ໃນຍຸກປັດຈຸບັນ. ດັ່ງນັ້ນ, ພວກເຈົ້າແຕ່ລະຄົນຄວນຈະເຮັດຢ່າງສຸດຂີດ ແລະ ສຸດຄວາມສາມາດ ເພື່ອວ່າພວກເຈົ້າອາດຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ.

ທຸກວັນນີ້ ເຈົ້າບໍ່ຕ້ອງໃສ່ໃຈກັບສິ່ງທີ່ເປັນລົບ. ກ່ອນອື່ນເຈົ້າຕ້ອງປະຖິ້ມ ແລະ ບໍ່ສົນໃຈຕໍ່ສິ່ງທີ່ຈະເຮັດໃຫ້ເຈົ້າຮູ້ສຶກໃນທາງລົບ. ເມື່ອເຈົ້າຮັບຜິດຊອບເລື່ອງຕ່າງໆ ເຈົ້າຕ້ອງຮັກສາຫົວໃຈແຫ່ງການສະແຫວງຫາ ແລະ ການໄຄວ່ຄວ້າ ແລະ ເຈົ້າຕ້ອງຮັກສາຫົວໃຈແຫ່ງການເຊື່ອຟັງພຣະເຈົ້າ. ເມື່ອໃດກໍຕາມທີ່ພວກເຈົ້າຄົ້ນພົບຈຸດອ່ອນຢູ່ພາຍໃນຕົວພວກເຈົ້າ, ແຕ່ພວກເຈົ້າບໍ່ໄດ້ຕົກຢູ່ໃນການຄວບຄຸມຂອງມັນ ແລະ ພວກເຈົ້າປະຕິບັດໜ້າທີ່ ທີ່ຕົນຄວນປະຕິບັດ, ສິ່ງນີ້ແມ່ນການກ້າວໄປຂ້າງໜ້າທີ່ເປັນທາງບວກ. ເຊັ່ນຕົວຢ່າງ: ພວກອ້າຍ ແລະ ເອື້ອຍມີຄວາມເຊື່ອທາງສາສະໜາ, ແຕ່ວ່າເຈົ້າກໍສາມາດອະທິຖານ ແລະ ເຈົ້າສາມາດຍອມຮັບ, ກິນ ແລະ ດື່ມພຣະທຳຂອງພຣະເຈົ້າໄດ້ ແລະ ຮ້ອງເພງສັນລະເສີນ... ຢູ່ໃນພຣະທຳ, ສິ່ງໃດກໍຕາມທີ່ເຈົ້າສາມາດເຮັດໄດ້, ໜ້າທີ່ໃດກໍຕາມທີ່ເຈົ້າສາມາດປະຕິບັດໄດ້, ໃຫ້ເຈົ້າທຸ້ມເທໃສ່ດ້ວຍກຳລັງແຮງທັງໝົດທີ່ເຈົ້າສາມາດຮວບຮວມໄດ້. ຈົ່ງຢ່າຄອງຄອຍຢູ່ລ້າໆ. ການທີ່ສາມາດປະຕິບັດໜ້າທີ່ຂອງຕົນຈົນເປັນທີ່ເພິ່ງພໍໃຈຂອງພຣະເຈົ້ານັ້ນຄືບາດກ້າວທຳອິດ. ເມື່ອເຈົ້າສາມາດເຂົ້າໃຈຄວາມຈິງ ແລະ ເຂົ້າໄປສູ່ຄວາມເປັນຈິງຂອງພຣະທຳຂອງພຣະເຈົ້າ, ເຈົ້າກໍຈະຖືກເຮັດໃຫ້ສົມບູນ ໂດຍພຣະເຈົ້າ.

# ກ່ຽວກັບການນຳໃຊ້ມະນຸດຂອງພຣະເຈົ້າ

ບໍ່ມີໃຜສາມາດດຳລົງຊີວິດແບບອິດສະຫຼະໄດ້ຍົກເວັ້ນຜູ້ທີ່ໄດ້ຮັບທິດທາງ ແລະ ການຊີ້ນຳພິເສດໂດຍພຣະວິນຍານບໍລິສຸດ, ເພາະວ່າພວກເຂົາຕ້ອງການພັນທະກິດ ແລະ ການລ້ຽງດູຈາກຜູ້ທີ່ຖືກໃຊ້ໂດຍພຣະເຈົ້າ. ດ້ວຍເຫດນັ້ນ, ໃນແຕ່ລະຍຸກ ພຣະເຈົ້າຍົກລະດັບຜູ້ຄົນທີ່ແຕກຕ່າງກັນ ຜູ້ທີ່ເຮັ່ງຮີບ ແລະ ຫຍຸ້ງວຽກຕະຫຼອດຍ້ອນລ້ຽງດູຄຣິດຕະຈັກຕ່າງໆເພື່ອຜົນປະໂຫຍດຂອງພາລະກິດຂອງພຣະອົງ. ນັ້ນໝາຍຄວາມວ່າ ພາລະກິດຂອງພຣະເຈົ້າຕ້ອງເຮັດໂດຍຜູ້ທີ່ພຣະອົງເຫັນຊອບ ແລະ ອະນຸມັດ; ພຣະວິນຍານບໍລິສຸດຕ້ອງໃຊ້ສ່ວນໜຶ່ງທີ່ຢູ່ໃນຕົວພວກເຂົາທີ່ເໝາະສົມໃນການນຳໃຊ້ເພື່ອປະຕິບັດພາລະກິດ ແລະ ພວກເຂົາຈະຖືກເຮັດໃຫ້ເໝາະສົມໃນການນຳໃຊ້ໂດຍພຣະເຈົ້າ ໂດຍຜ່ານການເຮັດໃຫ້ສົມບູນແບບໂດຍພຣະວິນຍານບໍລິສຸດ. ເນື່ອງຈາກວ່າຄວາມສາມາດໃນການເຂົ້າໃຈຂອງມະນຸດຍັງມີຄວາມຈຳກັດຫຼາຍເກີນໄປ ເຂົາຕ້ອງໄດ້ຮັບການລ້ຽງດູຈາກຜູ້ທີ່ຖືກໃຊ້ໂດຍພຣະເຈົ້າ; ມັນຄືກັນກັບ ການທີ່ພຣະເຈົ້ານຳໃຊ້ໂມເຊ, ຜູ້ທີ່ພຣະອົງເຫັນວ່າເໝາະສົມສຳລັບການນຳໃຊ້ໃນເວລານັ້ນ ແລະ ຜູ້ທີ່ພຣະອົງໃຊ້ເພື່ອປະຕິບັດພາລະກິດຂອງພຣະເຈົ້າໃນຍຸກນັ້ນ. ໃນຂັ້ນຕອນນີ້, ພຣະເຈົ້າໃຊ້ຊາຍຄົນໜຶ່ງ ໂດຍໃຊ້ປະໂຫຍດຈາກສ່ວນໜຶ່ງໃນຕົວເຂົາ ທີ່ສາມາດນຳໃຊ້ໂດຍພຣະວິນຍານບໍລິສຸດເພື່ອປະຕິບັດພາລະກິດ ແລະ ພຣະວິນຍານບໍລິສຸດທັງຊີ້ນຳ ແລະ ເຮັດໃຫ້ສ່ວນທີ່ຍັງເຫຼືອທີ່ບໍ່ສາມາດໃຊ້ໄດ້ນັ້ນສົມບູນແບບໃນເວລາດຽວກັນ.

ພາລະກິດທີ່ປະຕິບັດໂດຍຜູ້ທີ່ຖືກນຳໃຊ້ໂດຍພຣະເຈົ້າແມ່ນເພື່ອການຮ່ວມມືກັບພາລະກິດຂອງພຣະຄຣິດ ຫຼື ພຣະວິນຍານບໍລິສຸດ. ຜູ້ຊາຍຄົນນີ້ໄດ້ຖືກຍົກຂຶ້ນມາໂດຍພຣະເຈົ້າໃນບັນດາມະນຸດ, ເພິ່ນຢູ່ທີ່ນັ້ນເພື່ອນຳພາທຸກຄົນທີ່ຖືກເລືອກໂດຍພຣະເຈົ້າ ແລະ ເພິ່ນຍັງໄດ້ຖືກຍົກຂຶ້ນມາໂດຍພຣະເຈົ້າເພື່ອເຮັດວຽກຮ່ວມມືກັບມະນຸດ. ໂດຍຜ່ານບຸກຄົນນີ້, ຜູ້ທີ່ສາມາດເຮັດວຽກຮ່ວມມືກັບມະນຸດ, ຄວາມຕ້ອງການຂອງພຣະເຈົ້າຕໍ່ມະນຸດທີ່ຫຼາຍຂຶ້ນ ແລະ ພາລະກິດທີ່ພຣະວິນຍານບໍລິສຸດຕ້ອງປະຕິບັດທ່າມກາງມະນຸດກໍຈະສາມາດບັນລຸໄດ້ໂດຍຜ່ານບຸກຄົນນີ້. ເວົ້າໄດ້ອີກຢ່າງໜຶ່ງກໍຄື: ຈຸດປະສົງຂອງພຣະເຈົ້າໃນການນຳໃຊ້ຜູ້ຊາຍຄົນນີ້ແມ່ນເພື່ອໃຫ້ທຸກຄົນທີ່ຕິດຕາມພຣະເຈົ້າສາມາດເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າຫຼາຍຂຶ້ນ ແລະ ສາມາດບັນລຸຂໍ້ກຳນົດຂອງພຣະເຈົ້າຫຼາຍຂຶ້ນ. ເນື່ອງຈາກວ່າຜູ້ຄົນບໍ່ສາມາດເຂົ້າໃຈພຣະທຳຂອງພຣະເຈົ້າ ຫຼື ຄວາມປະສົງຂອງພຣະເຈົ້າໄດ້ໂດຍກົງ, ພຣະເຈົ້າຈຶ່ງແຕ່ງຕັ້ງບາງຄົນຂຶ້ນມາ ເພື່ອໃຊ້ປະຕິບັດພາລະກິດດັ່ງກ່າວ. ບຸກຄົນໆນີ້ຜູ້ທີ່ຖືກນຳໃຊ້ໂດຍພຣະເຈົ້າສາມາດຖືກອະທິບາຍໃຫ້ເປັນສື່ກາງທີ່ພຣະເຈົ້ານຳພາຜູ້ຄົນ, ເປັນ "ຜູ້ແປພາສາ" ທີ່ສື່ສານລະຫວ່າງພຣະເຈົ້າ ແລະ ມະນຸດ. ດັ່ງນັ້ນ ຜູ້ຄົນດັ່ງກ່າວບໍ່ຄືກັບຜູ້ທີ່ເຮັດວຽກຢູ່ໃນຄົວເຮືອນຂອງພຣະເຈົ້າ ຫຼື ຜູ້ທີ່ເປັນອັກຄະສາວົກຂອງພຣະອົງ. ເໝືອນກັບພວກເຂົາ, ບຸກຄົນດັ່ງກ່າວສາມາດເວົ້າໄດ້ວ່າ ເປັນຜູ້ທີ່ເຮັດໜ້າທີ່ຮັບໃຊ້ພຣະເຈົ້າ, ແຕ່ໃນແກ່ນແທ້ຂອງ ພາລະກິດຂອງເຂົາ ແລະ ເບື້ອງຫຼັງໃນການນຳໃຊ້ບຸກຄົນດັ່ງກ່າວຂອງພຣະເຈົ້າແລ້ວ ບຸກຄົນນີ້ ມີຄວາມແຕກຕ່າງຫຼາຍ ຈາກຜູ້ເຮັດວຽກ ແລະ

ອັກຄະສາວົກຄົນອື່ນໆ. ໃນດ້ານຂອງແກ່ນແທ້ຂອງພາລະກິດຂອງເຂົາ ແລະ ເບື້ອງຫຼັງຂອງການນຳໃຊ້ເຂົາ, ບຸກຄົນທີ່ຖືກໃຊ້ໂດຍພຣະເຈົ້າແມ່ນຖືກຫຼໍ່ລ້ຽງໂດຍພຣະອົງ, ເຂົາໄດ້ຮັບການຈັດແຈງໂດຍພຣະເຈົ້າສຳລັບພາລະກິດຂອງພຣະເຈົ້າ ແລະ ເຂົາໄດ້ປະກອບຮ່ວມເຂົ້າໃນພາລະກິດຂອງພຣະເຈົ້າເອງ. ບໍ່ມີໃຜສາມາດເຮັດພາລະກິດຂອງເຂົາແທນເຂົາໄດ້, ນີ້ເປັນການຮ່ວມມືຂອງມະນຸດທີ່ບໍ່ສາມາດຂາດໄດ້ ເຊິ່ງຄຽງຄູ່ກັບພາລະກິດອັນສັກສິດ. ໃນຂະນະດຽວກັນ, ພາລະກິດທີ່ປະຕິບັດໂດຍຜູ້ເຮັດວຽກ ຫຼື ອັກຄະສາວົກຄົນອື່ນໆນັ້ນ ແມ່ນເປັນພຽງການຖ່າຍທອດ ແລະ ການຈັດຕັ້ງປະຕິບັດການຈັດແຈງຫຼາຍລັກສະນະຄຣິດຕະຈັກໃນແຕ່ລະໄລຍະ ຫຼື ບໍ່ກໍເປັນວຽກງານທຳມະດາທີ່ສະໜອງແກ່ຊີວິດແບບງ່າຍໆເພື່ອດູແລຮັກສາຄຣິດຕະຈັກເທົ່ານັ້ນ. ຜູ້ເຮັດວຽກ ແລະ ອັກຄະສາວົກເຫຼົ່ານີ້ ບໍ່ໄດ້ຮັບການແຕ່ງຕັ້ງໂດຍພຣະເຈົ້າ, ແຮງໄກທີ່ພວກເຂົາຈະສາມາດຖືກເອີ້ນວ່າ ຜູ້ທີ່ຖືກນຳໃຊ້ໂດຍພຣະວິນຍານບໍລິສຸດ. ພວກເຂົາຖືກຄັດເລືອກມາຈາກບັນດາຄຣິສຕະຈັກ ແລະ ຫຼັງຈາກພວກເຂົາໄດ້ຮັບການຝຶກອົບຮົມ ແລະ ປູກຝັງເປັນໄລຍະເວລາໃດໜຶ່ງ, ຜູ້ທີ່ມີຄວາມເໝາະສົມຈະຖືກເກັບຮັກສາໄວ້ ໃນຂະນະດຽວກັນຜູ້ທີ່ບໍ່ເໝາະສົມກໍຈະຖືກສົ່ງຄືນໄປບ່ອນທີ່ເດີມຂອງພວກເຂົາ. ເນື່ອງຈາກວ່າຜູ້ຄົນເຫຼົ່ານີ້ຖືກຄັດເລືອກມາຈາກບັນດາຄຣິດຕະຈັກ, ບາງຄົນສະແດງໃຫ້ເຫັນທາດແທ້ຂອງພວກເຂົາ ຫຼັງຈາກທີ່ໄດ້ກາຍມາເປັນຜູ້ນຳ ແລະ ບາງຄົນເຖິງກັບເຮັດຫຼາຍສິ່ງທີ່ບໍ່ດີ ແລະ ໃນທີ່ສຸດກໍຖືກກຳຈັດອອກ. ກົງກັນຂ້າມ, ຜູ້ທີ່ຖືກນຳໃຊ້ໂດຍພຣະເຈົ້າແມ່ນຜູ້ທີ່ຖືກຈັດກຽມໂດຍພຣະເຈົ້າ ແລະ ຜູ້ທີ່ມີຄວາມສາມາດໃນລະດັບໃດໜຶ່ງ ແລະ ມີຄວາມເປັນມະນຸດ. ເຂົາໄດ້ຮັບການຈັດກຽມ ແລະ ເຮັດໃຫ້ສົມບູນລ່ວງໜ້າໂດຍພຣະວິນຍານບໍລິສຸດ ແລະ ໄດ້ຮັບການນຳພາຢ່າງສົມບູນໂດຍພຣະວິນຍານບໍລິສຸດ ແລະ ໂດຍສະເພາະເມື່ອເວົ້າເຖິງວຽກງານຂອງເຂົາ, ເຂົາໄດ້ຮັບການຊີ້ນຳ ແລະ ບັນຊາໂດຍພຣະວິນຍານບໍລິສຸດ, ດ້ວຍເຫດນັ້ນ, ຈຶ່ງບໍ່ມີຄວາມຫັນເຫໃນເສັ້ນທາງແຫ່ງການນຳພາຜູ້ຄົນທີ່ພຣະເຈົ້າເລືອກ, ເພາະວ່າພຣະເຈົ້າຮັບຜິດຊອບພາລະກິດຂອງພຣະອົງເອງຢ່າງແນ່ນອນ ແລະ ພຣະເຈົ້າປະຕິບັດພາລະກິດຂອງພຣະອົງເອງຕະຫຼອດເວລາ.

# ຫຼັງຈາກທີ່ເຈົ້າເຂົ້າໃຈຄວາມຈິງ, ເຈົ້າຄວນນຳມັນເຂົ້າສູ່ການປະຕິບັດ

ພາລະກິດ ແລະ ພຣະທຳຂອງພຣະເຈົ້າມີເຈດຕະນາທີ່ເຮັດໃຫ້ເກີດການປ່ຽນແປງໃນອຸປະນິໄສຂອງພວກເຈົ້າ; ເປົ້າໝາຍຂອງພຣະອົງບໍ່ແມ່ນພຽງເຮັດໃຫ້ພວກເຈົ້າເຂົ້າໃຈ ຫຼື ຮູ້ຈັກພາລະກິດ ແລະ ພຣະທຳຂອງພຣະອົງ. ມັນບໍ່ໄດ້ພຽງແຕ່ນັ້ນ. ເຈົ້າເປັນຄົນທີ່ມີຄວາມສາມາດໃນການເຂົ້າໃຈ, ສະນັ້ນ ພວກເຈົ້າບໍ່ຄວນມີຄວາມຫຍຸ້ງຍາກໃນການເຂົ້າໃຈພຣະທຳຂອງພຣະເຈົ້າ ເພາະພຣະທຳສ່ວນໃຫຍ່ຂອງພຣະເຈົ້າແມ່ນຖືກຂຽນໃນພາສາຂອງມະນຸດ ແລະ ພຣະອົງເວົ້າຢ່າງແຈ່ມແຈ້ງຫຼາຍ. ຍົກຕົວຢ່າງເຊັ່ນ ພວກເຈົ້າສາມາດຮຽນຮູ້ວ່າ ພຣະເຈົ້າຕ້ອງການໃຫ້ພວກເຈົ້າເຂົ້າໃຈ ແລະ ປະຕິບັດຫຍັງ; ນີ້ແມ່ນສິ່ງທີ່ຄົນປົກກະຕິ ຜູ້ເຊິ່ງມີຄວາມສາມາດໃນການເຂົ້າໃຈ ຄວນສາມາດເຮັດໄດ້. ໂດຍສະເພາະແລ້ວພຣະທຳທີ່ພຣະເຈົ້າກ່າວໃນຂັ້ນຕອນປັດຈຸບັນກໍຊັດເຈນ ແລະ ໂປ່ງໃສເປັນພິເສດ ແລະ ພຣະເຈົ້າກຳລັງຊີ້ໃຫ້ເຫັນຫຼາຍໆສິ່ງທີ່ຜູ້ຄົນບໍ່ໄດ້ພິຈາລະນາ ພ້ອມທັງທຸກລັກສະນະຂອງສະພາວະຂອງມະນຸດ. ພຣະທຳຂອງພຣະອົງປົກຄຸມໝົດທຸກຢ່າງ ແລະ ແຈ່ມແຈ້ງຄືກັບແສງສະຫວ່າງຂອງເດືອນເພັງ. ແລ້ວໃນຕອນນີ້ຜູ້ຄົນກໍເຂົ້າໃຈບັນຫາຫຼາຍຢ່າງ, ແຕ່ຍັງມີສິ່ງທີ່ຂາດໄປ ນັ້ນກໍຄືການທີ່ຜູ້ຄົນນຳພຣະທຳຂອງພຣະອົງເຂົ້າສູ່ໃນການປະຕິບັດ. ຜູ້ຄົນຕ້ອງພະເຊີນກັບຄວາມຈິງທຸກດ້ານຢ່າງລະອຽດ ແລະ ຄົ້ນຫາ ແລະ ສະແຫວງຫາໃນລາຍລະອຽດຫຼາຍຂຶ້ນ, ແທນທີ່ຈະລໍຖ້າຮັບເອົາແມ່ນຫຍັງກໍຕາມທີ່ຖືກຈັດກຽມໄວ້ໃຫ້ກັບພວກເຂົາແລ້ວ; ຖ້າບໍ່ດັ່ງນັ້ນ ພວກເຂົາກໍບໍ່ຕ່າງຫຍັງກັບເຊື້ອກາຝາກ. ພວກເຂົາຮູ້ຈັກພຣະທຳຂອງພຣະເຈົ້າ, ແຕ່ບໍ່ໄດ້ນຳພຣະທຳນັ້ນເຂົ້າສູ່ການປະຕິບັດ. ຄົນປະເພດນີ້ບໍ່ຮັກຄວາມຈິງ ແລະ ຈະຖືກໂຍນອອກໄປໃນທີ່ສຸດ. ເພື່ອຈະເປັນຄືກັບເປໂຕໃນຊຸມປີ 90, ນີ້ໝາຍຄວາມວ່າ ພວກເຈົ້າແຕ່ລະຄົນຄວນປະຕິບັດພຣະທຳຂອງພຣະເຈົ້າ, ມີທາງເຂົ້າທີ່ແທ້ຈິງໃນປະສົບການຂອງພວກເຈົ້າ ແລະ ເຖິງກັບໄດ້ຮັບເອົາແສງສະຫວ່າງທີ່ຍິ່ງໃຫຍ່ເພີ່ມຂຶ້ນເລື້ອຍໆໃນການຮ່ວມມືຂອງພວກເຈົ້າກັບພຣະເຈົ້າ ເຊິ່ງຈະເປັນຄວາມຊ່ວຍເຫຼືອທີ່ເພີ່ມຂຶ້ນເລື້ອຍໆໃນສູ່ຊີວິດຂອງພວກເຈົ້າເອງ. ຖ້າພວກເຈົ້າໄດ້ອ່ານພຣະທຳຫຼາຍຂໍ້ຂອງພຣະເຈົ້າ ແຕ່ເຂົ້າໃຈພຽງແຕ່ຄວາມໝາຍຂອງຂໍ້ຄວາມ ແລະ ບໍ່ມີຄວາມຮູ້ໂດຍກົງກ່ຽວກັບພຣະທຳຂອງພຣະເຈົ້າຜ່ານປະສົບການພາກປະຕິບັດຂອງພວກເຈົ້າ, ແລ້ວເຈົ້າກໍຈະບໍ່ຮູ້ຈັກພຣະທຳຂອງພຣະເຈົ້າ. ຕາມຄວາມຄິດຂອງເຈົ້າແລ້ວ, ພຣະທຳຂອງພຣະເຈົ້າບໍ່ແມ່ນຊີວິດ ແຕ່ເປັນພຽງຕົວອັກສອນທີ່ບໍ່ມີຊີວິດ. ແລ້ວຖ້າເຈົ້າພຽງແຕ່ດຳລົງຊີວິດໂດຍປະຕິບັດຕາມຕົວອັກສອນທີ່ບໍ່ມີຊີວິດເທົ່ານັ້ນ, ແລ້ວເຈົ້າກໍບໍ່ສາມາດເຂົ້າໃຈເຖິງແກ່ນແທ້ຂອງພຣະທຳຂອງພຣະເຈົ້າໄດ້ ຫຼື ເຈົ້າຈະບໍ່ເຂົ້າໃຈຄວາມປະສົງຂອງພຣະອົງເລີຍ. ມີແຕ່ເມື່ອເຈົ້າມີປະສົບການກັບພຣະທຳຂອງພຣະເຈົ້າໃນປະສົບການທີ່ແທ້ຈິງຂອງເຈົ້າເທົ່ານັ້ນ ຄວາມໝາຍຝ່າຍວິນຍານຂອງພຣະທຳຂອງພຣະເຈົ້າຈຶ່ງຈະເປີດເຜີຍຕົວມັນເອງໃຫ້ແກ່ເຈົ້າ ແລະ ໃນປະສົບການເທົ່ານັ້ນ ເຈົ້າຈຶ່ງສາມາດເຂົ້າໃຈຄວາມໝາຍຝ່າຍວິນຍານກ່ຽວກັບຄວາມຈິງຫຼາຍຢ່າງ ແລະ ໄຂຄວາມລຶກລັບແຫ່ງພຣະທຳຂອງພຣະເຈົ້າໄດ້. ຖ້າເຈົ້າບໍ່ນຳພຣະທຳເຂົ້າສູ່ການ

ປະຕິບັດ ແລ້ວບໍ່ວ່າພຣະທຳຂອງພຣະອົງຈະຊັດເຈນສໍ່າໃດກໍຕາມ, ສິ່ງດຽວທີ່ເຈົ້າເຂົ້າໃຈກໍເປັນພຽງຕົວອັກສອນ ແລະ ຄຳສັ່ງສອນທີ່ວ່າງເປົ່າເທົ່ານັ້ນ ເຊິ່ງໄດ້ກາຍເປັນກົດລະບຽບທາງສາສະໜາໃຫ້ກັບເຈົ້າ. ສິ່ງນີ້ບໍ່ແມ່ນສິ່ງທີ່ພວກຟາຣີຊາຍເຮັດບໍ? ຖ້າພວກເຈົ້າປະຕິບັດ ແລະ ຜະເຊີນກັບພຣະທຳຂອງພຣະເຈົ້າ, ພຣະທຳນັ້ນກໍຈະມີປະໂຫຍດໃຫ້ກັບພວກເຈົ້າ; ຖ້າພວກເຈົ້າບໍ່ສະແຫວງຫາເພື່ອປະຕິບັດພຣະທຳນັ້ນ, ແລ້ວພຣະທຳຂອງພຣະເຈົ້າສຳລັບພວກເຈົ້າແລ້ວ ກໍບໍ່ຕ່າງຫຍັງກັບເລື່ອງເລົ່າລືໃນສະຫວັນຊັ້ນສາມ. ໃນຄວາມເປັນຈິງແລ້ວ, ຂະບວນການຂອງການເຊື່ອໃນພຣະເຈົ້າແມ່ນຂະບວນການທີ່ພວກເຈົ້າຜະເຊີນກັບພຣະທຳຂອງພຣະອົງ ພ້ອມທັງຖືກພຣະເຈົ້າຮັບເອົາ ຫຼື ເພື່ອເວົ້າໃຫ້ຊັດເຈນຂຶ້ນກວ່ານີ້ກໍຄືການເຊື່ອໃນພຣະເຈົ້າແມ່ນການມີຄວາມຮູ້ ແລະ ຄວາມເຂົ້າໃຈໃນພຣະທຳຂອງພຣະອົງ ແລະການຜະເຊີນ ແລະ ດຳລົງຊີວິດຕາມພຣະທຳຂອງພຣະອົງ; ນັ້ນແມ່ນຄວາມເປັນຈິງທີ່ຢູ່ເບື້ອງຫຼັງຄວາມເຊື່ອຂອງພວກເຈົ້າໃນພຣະເຈົ້າ. ຖ້າພວກເຈົ້າເຊື່ອໃນພຣະເຈົ້າ ແລະ ຫວັງມີຊີວິດຕະຫຼອດໄປເປັນນິດ ໂດຍບໍ່ສະແຫວງຫາເພື່ອປະຕິບັດພຣະທຳຂອງພຣະເຈົ້າ ແລະ ເຂົ້າສູ່ຄວາມເປັນຈິງຂອງຄວາມຈິງ, ແລ້ວພວກເຈົ້າກໍໂງ່ຈ້າ. ນີ້ເປັນຄືກັບການໄປງານລ້ຽງສະຫຼອງ ແລະ ເບິ່ງອາຫານ ແລະຮຽນຮູ້ສິ່ງຂອງແຊບໆດ້ວຍໃຈເທົ່ານັ້ນ ໂດຍບໍ່ໄດ້ຊີມມັນເລີຍ, ມັນຈະບໍ່ຄືກັບການກິນ ຫຼື ການດື່ມຫຍັງເລີຍ. ຄົນປະເພດນັ້ນບໍ່ແມ່ນຄົນໂງ່ບໍ?

ຄວາມຈິງທີ່ມະນຸດຕ້ອງມີແມ່ນຄົ້ນພົບໃນພຣະທຳຂອງພຣະເຈົ້າ ແລະ ມັນເປັນຄວາມຈິງທີ່ມີຜົນປະໂຫຍດ ແລະ ເປັນປະໂຫຍດທີ່ສຸດໃຫ້ກັບມະນຸດຊາດ. ມັນແມ່ນຢາບຳລຸງ ແລະ ການບຳລຸງລ້ຽງທີ່ຮ່າງກາຍຂອງພວກເຈົ້າຕ້ອງການ, ເປັນສິ່ງທີ່ຊ່ວຍໃຫ້ມະນຸດຟື້ນຟູຄວາມເປັນມະນຸດປົກກະຕິຂອງເຂົາ. ມັນເປັນຄວາມຈິງທີ່ມະນຸດຄວນປະກອບມີ. ຍິ່ງພວກເຈົ້າປະຕິບັດພຣະທຳຂອງພຣະເຈົ້າຫຼາຍສໍ່າໃດ, ຊີວິດຂອງພວກເຈົ້າກໍຍິ່ງເກີດດອກອອກຜົນໄດ້ໄວຫຼາຍສໍ່ານັ້ນ ແລະ ຄວາມຈິງກໍຍິ່ງຈະຊັດເຈນຫຼາຍສໍ່ານັ້ນ. ໃນຂະນະທີ່ເຈົ້າເຕີບໃຫຍ່ໃນວຸດທິພາວະ, ພວກເຈົ້າກໍຈະເຫັນສິ່ງຕ່າງໆຢູ່ໃນໂລກຝ່າຍວິນຍານຢ່າງຊັດເຈນຂຶ້ນ ແລະ ພວກເຈົ້າຈະມີພະລັງເພີ່ມຂຶ້ນເພື່ອເອົາຊະນະຊາຕານ. ຄວາມຈິງຫຼາຍຢ່າງທີ່ພວກເຈົ້າບໍ່ເຂົ້າໃຈກໍຈະຖືກເຮັດໃຫ້ແຈ່ມແຈ້ງ ເມື່ອພວກເຈົ້າປະຕິບັດພຣະທຳຂອງພຣະເຈົ້າ. ຄົນສ່ວນຫຼາຍແມ່ນພໍໃຈກັບການເຂົ້າໃຈຂໍ້ຄວາມແຫ່ງພຣະທຳຂອງພຣະເຈົ້າເທົ່ານັ້ນ ແລະ ໃສ່ໃຈກັບປະກອບຕົນເອງດ້ວຍຄຳສັ່ງສອນ ແທນທີ່ຈະລົງເລິກໃນປະສົບການປະຕິບັດຂອງພວກເຂົາ, ແຕ່ນັ້ນບໍ່ແມ່ນວິທີຂອງພວກຟາຣີຊາຍບໍ? ແລ້ວວະລີທີ່ວ່າ “ພຣະທຳຂອງພຣະເຈົ້າແມ່ນຊີວິດ” ຈະເປັນຈິງສຳລັບພວກເຂົາໄດ້ແນວໃດ? ຊີວິດຂອງບຸກຄົນໃດໜຶ່ງບໍ່ສາມາດເຕີບໃຫຍ່ໄດ້ໂດຍການອ່ານພຣະທຳຂອງພຣະເຈົ້າພຽງຢ່າງດຽວ, ແຕ່ມີແຕ່ເມື່ອພຣະທຳຂອງພຣະເຈົ້າຖືກນຳເຂົ້າສູ່ການປະຕິບັດ. ຖ້າມັນເປັນຄວາມເຊື່ອຂອງເຈົ້າທີ່ວ່າ ການເຂົ້າໃຈພຣະທຳຂອງພຣະເຈົ້າແມ່ນສິ່ງດຽວທີ່ຈຳເປັນໃນການມີຊີວິດ ແລະ ວຸດທິພາວະ, ແລ້ວຄວາມເຂົ້າໃຈຂອງເຈົ້າກໍບິດເບືອນ. ການເຂົ້າໃຈພຣະທຳຂອງພຣະເຈົ້າຢ່າງແທ້ຈິງເກີດຂຶ້ນເມື່ອເຈົ້າປະຕິບັດຄວາມຈິງ ແລະ ເຈົ້າຕ້ອງເຂົ້າໃຈວ່າ “ໂດຍການປະຕິບັດຄວາມຈິງເທົ່ານັ້ນ ຈຶ່ງຈະເຂົ້າໃຈຄວາມຈິງໄດ້”. ໃນປັດຈຸບັນ, ຫຼັງຈາກທີ່ອ່ານພຣະທຳ

ຂອງພຣະເຈົ້າ, ເຈົ້າພຽງແຕ່ສາມາດເວົ້າວ່າ ເຈົ້າຮູ້ຈັກພຣະທຳຂອງພຣະເຈົ້າ, ແຕ່ເຈົ້າບໍ່ສາມາດເວົ້າໄດ້ວ່າ ເຈົ້າເຂົ້າໃຈພຣະທຳນັ້ນ. ບາງຄົນເວົ້າວ່າ ວິທີດຽວທີ່ຈະປະຕິບັດຄວາມຈິງໄດ້ກໍຄືການເຂົ້າໃຈຄວາມຈິງນັ້ນກ່ອນ, ແຕ່ຄຳເວົ້ານີ້ພຽງຖືກແຕ່ບາງສ່ວນ ແລະ ບໍ່ຖືກຕ້ອງທັງໝົດ. ກ່ອນທີ່ເຈົ້າມີຄວາມຮູ້ກ່ຽວກັບຄວາມຈິງ, ເຈົ້າບໍ່ໄດ້ມີປະສົບການກັບຄວາມຈິງນັ້ນ. ຄວາມຮູ້ສຶກທີ່ວ່າ ເຈົ້າເຂົ້າໃຈສິ່ງທີ່ເຈົ້າໄດ້ຍິນຈາກການເທດສະໜາບໍ່ແມ່ນຄວາມເຂົ້າໃຈຢ່າງແທ້ຈິງ, ນີ້ເປັນພຽງການມີຄຳເວົ້າຕາມຕົວອັກສອນແຫ່ງຄວາມຈິງເທົ່ານັ້ນ ແລະ ມັນບໍ່ຄືກັບການເຂົ້າໃຈຄວາມໝາຍທີ່ແທ້ຈິງທີ່ຢູ່ໃນນັ້ນ. ການມີພຽງແຕ່ຄວາມຮູ້ຜິວເຜີນກ່ຽວກັບຄວາມຈິງ ບໍ່ໄດ້ໝາຍຄວາມວ່າເຈົ້າເຂົ້າໃຈມັນຢ່າງແທ້ຈິງ ຫຼື ມີຄວາມຮູ້ກ່ຽວກັບມັນ; ຄວາມໝາຍທີ່ແທ້ຈິງຂອງຄວາມຈິງແມ່ນມາຈາກການມີປະສົບການກັບຄວາມຈິງນັ້ນ. ສະນັ້ນ, ມີແຕ່ເມື່ອເຈົ້າມີປະສົບການກັບຄວາມຈິງເທົ່ານັ້ນ ເຈົ້າຈຶ່ງຈະສາມາດເຂົ້າໃຈຄວາມຈິງໄດ້ ແລະ ມີແຕ່ເມື່ອນັ້ນ ເຈົ້າຈຶ່ງເຂົ້າໃຈສ່ວນລີ້ລັບຂອງຄວາມຈິງໄດ້. ການເຮັດໃຫ້ປະສົບການຂອງເຈົ້າເລິກເຊິ່ງເປັນພຽງວິທີດຽວທີ່ຈະເຂົ້າໃຈຄວາມໝາຍແອບແຝງຂອງຄວາມຈິງ ແລະ ເຂົ້າໃຈເຖິງໃຈແກ່ນແທ້ຂອງຄວາມຈິງ. ສະນັ້ນ, ເຈົ້າສາມາດໄປໄດ້ທຸກບ່ອນດ້ວຍຄວາມຈິງ, ແຕ່ຖ້າບໍ່ມີຄວາມຈິງໃນຕົວເຈົ້າ, ແລ້ວຢ່າຄິດພະຍາຍາມແມ່ນແຕ່ຈະເຮັດໃຫ້ສະມາຊິກໃນຄອບຄົວຂອງເຈົ້າເຊື່ອເລີຍ, ແຮງໄກຖ້າເປັນຜູ້ຄົນຂອງສາສະໜາ. ຫາກປາສະຈາກຄວາມຈິງ, ເຈົ້າກໍເປັນເໝືອນກັບຫິມະທີ່ປິວໄປມາ, ແຕ່ເມື່ອມີຄວາມຈິງ, ເຈົ້າສາມາດມີຄວາມສຸກ ແລະ ເປັນອິດສະຫຼະໂດຍບໍ່ມີໃຜສາມາດໂຈມຕີເຈົ້າໄດ້. ບໍ່ວ່າທິດສະດີຈະເຂັ້ມແຂງສໍ່າໃດກໍຕາມ, ມັນກໍບໍ່ສາມາດເອົາຊະນະຄວາມຈິງໄດ້. ເມື່ອມີຄວາມຈິງ, ໂລກກໍສາມາດແກວ່ງໄກວໄດ້ ແລະ ພູເຂົາ ແລະ ທະເລເຄື່ອນຍ້າຍ ໃນຂະນະທີ່ການຂາດຄວາມຈິງສາມາດເຮັດໃຫ້ກຳແພງເມືອງອັນເຂັ້ມແຂງຖືກໜອນກັດຫຼຸດລົງເປັນເສດດິນໄດ້. ນີ້ແມ່ນຄວາມຈິງທີ່ຊັດເຈນ.

ໃນຂັ້ນຕອນປັດຈຸບັນ, ມັນເປັນສິ່ງສຳຄັນທີ່ຈະຮູ້ຈັກຄວາມຈິງກ່ອນ, ແລ້ວນຳຄວາມຈິງນັ້ນເຂົ້າສູ່ການປະຕິບັດ ແລະ ປະກອບຕົນເອງດ້ວຍຄວາມໝາຍທີ່ແທ້ຈິງແຫ່ງຄວາມຈິງ. ພວກເຈົ້າຄວນສະແຫວງຫາເພື່ອບັນລຸສິ່ງນີ້. ແທນທີ່ຈະສະແຫວງຫາເພື່ອເຮັດໃຫ້ຄົນອື່ນປະຕິບັດຕາມຄຳເວົ້າຂອງເຈົ້າເທົ່ານັ້ນ, ເຈົ້າຄວນເຮັດໃຫ້ພວກເຂົາປະຕິບັດຕາມການປະຕິບັດຂອງເຈົ້າ. ດ້ວຍສິ່ງນີ້ເທົ່ານັ້ນເຈົ້າຈຶ່ງຈະພົບໃນສິ່ງທີ່ມີຄວາມໝາຍ, ບໍ່ວ່າເຈົ້າຈະພົບກັບຜູ້ໃດກໍຕາມ, ຕາບໃດທີ່ເຈົ້າມີຄວາມຈິງ, ເຈົ້າຈະສາມາດຍຶດໝັ້ນໄດ້. ພຣະທຳຂອງພຣະເຈົ້າແມ່ນສິ່ງທີ່ນຳຊີວິດມາໃຫ້ກັບມະນຸດ ບໍ່ແມ່ນຄວາມຕາຍ. ຖ້າຫຼັງຈາກທີ່ອ່ານພຣະທຳຂອງພຣະເຈົ້າແລ້ວ ເຈົ້າບໍ່ມີຊີວິດຊີວາ ແຕ່ເຈົ້າຍັງຕາຍຢູ່, ແລ້ວມີບາງສິ່ງທີ່ຜິດພາດກັບເຈົ້າ. ຖ້າຫຼັງຈາກເວລາຊ່ວງໃດໜຶ່ງ, ເຈົ້າໄດ້ອ່ານພຣະທຳຂອງພຣະເຈົ້າຫຼາຍຄັ້ງ ແລະ ໄດ້ຍິນຄຳເທດສະໜາທີ່ເປັນປະໂຫຍດຫຼາຍຢ່າງ, ແຕ່ເຈົ້າຍັງຢູ່ໃນສະພາບແຫ່ງຄວາມຕາຍ, ແລ້ວສິ່ງນີ້ພິສູດໃຫ້ເຫັນວ່າ ເຈົ້າບໍ່ໄດ້ເປັນຄົນທີ່ໃຫ້ຄຸນຄ່າກັບຄວາມຈິງ ຫຼື ເຈົ້າບໍ່ແມ່ນຄົນທີ່ສະແຫວງຫາຄວາມຈິງ. ຖ້າພວກເຈົ້າພະຍາຍາມຮັບເອົາພຣະເຈົ້າຢ່າງແທ້ຈິງ, ພວກເຈົ້າຈະບໍ່ໃສ່ໃຈກັບການຈັດກຽມຕົນເອງດ້ວຍຄຳສັ່ງສອນທີ່ສູງສົ່ງ ແລະ ນຳໃຊ້ຄຳສັ່ງສອນທີ່ສູງສົ່ງເພື່ອສັ່ງສອນຄົນອື່ນ, ແຕ່

ກົງກັນຂ້າມ ເຈົ້າຈະໃສ່ໃຈກັບການຜະເຊີນກັບພຣະທຳຂອງພຣະເຈົ້າ ແລະ ນຳຄວາມຈິງເຂົ້າສູ່ການປະຕິບັດ. ນີ້ບໍ່ແມ່ນສິ່ງທີ່ພວກເຈົ້າຄວນເຂົ້າສູ່ໃນປັດຈຸບັນບໍ?

ມີເວລາທີ່ຈຳກັດສຳລັບພຣະເຈົ້າໃນການປະຕິບັດພາລະກິດຂອງພຣະອົງໃນມະນຸດ, ສະນັ້ນແມ່ນຫຍັງຄືຜົນຕາມມາ ຖ້າເຈົ້າບໍ່ຮ່ວມມືກັບພຣະອົງ? ເປັນຫຍັງພຣະເຈົ້າຈຶ່ງຕ້ອງການໃຫ້ພວກເຈົ້າປະຕິບັດຄວາມຈິງທັນທີທີ່ພວກເຈົ້າເຂົ້າໃຈຄວາມຈິງນັ້ນ? ນັ້ນກໍຍ້ອນວ່າ ພຣະເຈົ້າໄດ້ເປີດເຜີຍພຣະທຳຂອງພຣະອົງໃຫ້ກັບພວກເຈົ້າ ແລະ ຂັ້ນຕອນຕໍ່ໄປຂອງພວກເຈົ້າກໍຄືການປະຕິບັດພຣະທຳເຫຼົ່ານີ້ຢ່າງແທ້ຈິງ. ໃນຂະນະທີ່ພວກເຈົ້າປະຕິບັດພຣະທຳເຫຼົ່ານີ້, ພຣະເຈົ້າຈະປະຕິບັດພາລະກິດແຫ່ງແສງສະຫວ່າງ ແລະ ການນຳພາ. ນັ້ນເປັນວິທີການເຮັດໃຫ້ມັນສຳເລັດ. ພຣະທຳຂອງພຣະເຈົ້າປ່ອຍມະນຸດເກີດດອກອອກຜົນໃນຊີວິດ ແລະ ບໍ່ມີອົງປະກອບໃດທີ່ສາມາດເຮັດໃຫ້ມະນຸດປ່ຽງເບນ ຫຼື ເລີ່ມຂີ້ຄ້ານ. ເຈົ້າເວົ້າວ່າ ເຈົ້າໄດ້ອ່ານພຣະທຳຂອງພຣະເຈົ້າ ແລະ ປະຕິບັດພຣະທຳນັ້ນ, ແຕ່ເຈົ້າຍັງບໍ່ໄດ້ຮັບພາລະກິດໃດໜຶ່ງຈາກພຣະວິນຍານບໍລິສຸດເລີຍ. ຄຳເວົ້າຂອງເຈົ້າສາມາດຕົວະໄດ້ແຕ່ເດັກນ້ອຍເທົ່ານັ້ນ. ຄົນອື່ນອາດບໍ່ຮູ້ວ່າ ເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ຫຼື ບໍ່, ແຕ່ເຈົ້າຄິດບໍວ່າ ພຣະເຈົ້າກໍຈະບໍ່ຮູ້? ເປັນຫຍັງຄົນອື່ນຈຶ່ງປະຕິບັດພຣະທຳຂອງພຣະເຈົ້າ ແລະ ໄດ້ຮັບແສງສະຫວ່າງຂອງພຣະວິນຍານບໍລິສຸດ, ແຕ່ເຈົ້າປະຕິບັດພຣະທຳຂອງພຣະອົງ ແລະ ບໍ່ໄດ້ຮັບແສງສະຫວ່າງຂອງພຣະວິນຍານບໍລິສຸດ? ພຣະເຈົ້າມີຄວາມຮູ້ສຶກບໍ? ຖ້າເຈດຕະນາຂອງເຈົ້າຖືກຕ້ອງແທ້ໆ ແລະ ເຈົ້າໄດ້ໃຫ້ຄວາມຮ່ວມມື, ແລ້ວພຣະວິນຍານຂອງພຣະເຈົ້າກໍຈະສະຖິດໃນຕົວເຈົ້າຢ່າງແນ່ນອນ. ບາງຄົນຈຶ່ງຕ້ອງການປັກທຸງຂອງພວກເຂົາເອງ, ແຕ່ເປັນຫຍັງພຣະເຈົ້າບໍ່ຍອມໃຫ້ພວກເຂົາມີອຳນາດ ແລະ ນຳພາຄຣິສຕະຈັກ? ບາງຄົນພຽງແຕ່ປະຕິບັດບົດບາດຂອງພວກເຂົາ ແລະ ປະຕິບັດໜ້າທີ່ຂອງພວກເຂົາເທົ່ານັ້ນ ແລະ ກ່ອນທີ່ພວກເຂົາຈະຮູ້, ພວກເຂົາກໍໄດ້ຮັບເອົາການຍິນຍອມຂອງພຣະເຈົ້າ. ເປັນແບບນັ້ນໄດ້ແນວໃດ? ພຣະເຈົ້າກວດສອບສ່ວນເລິກຂອງຫົວໃຈມະນຸດ ແລະ ຜູ້ຄົນທີ່ສະແຫວງຫາຄວາມຈິງຕ້ອງເຮັດແບບນັ້ນດ້ວຍເຈດຕະນາທີ່ຖືກຕ້ອງ. ຜູ້ຄົນທີ່ບໍ່ມີເຈດຕະນາທີ່ຖືກຕ້ອງຈະບໍ່ສາມາດຍຶດໝັ້ນໄດ້. ໃນແກ່ນກາງຂອງມັນ, ເປົ້າໝາຍຫຼັກຂອງພວກເຈົ້າແມ່ນເພື່ອເຮັດໃຫ້ພຣະທຳຂອງພຣະເຈົ້າມີຜົນພາຍໃນພວກເຈົ້າ. ເວົ້າອີກຢ່າງໜຶ່ງກໍຄື ການມີຄວາມເຂົ້າໃຈຢ່າງແທ້ຈິງກ່ຽວກັບພຣະທຳຂອງພຣະເຈົ້າໃນການປະຕິບັດຄວາມຈິງຂອງພວກເຈົ້າ. ບາງເທື່ອ, ຄວາມສາມາດຂອງພວກເຈົ້າທີ່ຈະເຂົ້າໃຈພຣະທຳຂອງພຣະເຈົ້າມີຢູ່ຕໍ່າ, ແຕ່ເມື່ອພວກເຈົ້າປະຕິບັດພຣະທຳຂອງພຣະເຈົ້າ, ພຣະອົງສາມາດແກ້ໄຂຂໍ້ບົກຜ່ອງນີ້, ສະນັ້ນ ພວກເຈົ້າຈະບໍ່ພຽງແຕ່ຕ້ອງຮູ້ຄວາມຈິງຫຼາຍປະການເທົ່ານັ້ນ, ແຕ່ພວກເຈົ້າຕ້ອງປະຕິບັດຄວາມຈິງເຫຼົ່ານັ້ນອີກດ້ວຍ. ນີ້ແມ່ນຄວາມຕັ້ງໃຈທີ່ຍິ່ງໃຫຍ່ທີ່ສຸດທີ່ບໍ່ສາມາດເມີນເສີຍໄດ້. ພຣະເຢຊູໄດ້ທົນທຸກກັບຄວາມອັບອາຍຫຼາຍຢ່າງ ແລະ ການທົນທຸກຫຼາຍຢ່າງໃນຕອນອາຍຸສາມສິບສາມປີເຄິ່ງ. ພຣະອົງທົນທຸກທໍລະມານຢ່າງຫຼວງຫຼາຍ ຍ້ອນພຣະອົງປະຕິບັດຄວາມຈິງ, ປະຕິບັດຄວາມປະສົງຂອງພຣະເຈົ້າໃນທຸກສິ່ງ ແລະ ພຽງແຕ່ສົນໃຈກັບຄວາມປະສົງຂອງພຣະເຈົ້າ. ນີ້ແມ່ນການທົນທຸກທີ່ພຣະອົງຈະບໍ່ໄດ້ຜ່ານ ຖ້າພຣະອົງຮູ້ຈັກຄວາມຈິງ ໂດຍບໍ່ໄດ້ປະຕິບັດຄວາມຈິງນັ້ນ.

ຖ້າພຣະເຢຊູປະຕິບັດຕາມຄຳສັ່ງສອນຂອງຊາວຢິວ ແລະ ປະຕິບັດຕາມພວກຟາຣີຊາຍ, ແລ້ວພຣະອົງກໍຈະບໍ່ທົນທຸກທໍລະມານ. ເຈົ້າສາມາດຮຽນຮູ້ຈາກການກະທຳຂອງພຣະເຢຊູວ່າ ປະສິດຕິພາບຂອງພາລະກິດຂອງພຣະເຈົ້າໃນມະນຸດແມ່ນມາຈາກການຮ່ວມຂອງມະນຸດ ແລະ ສິ່ງນີ້ແມ່ນສິ່ງທີ່ພວກເຈົ້າຕ້ອງຮັບຮູ້. ພຣະເຢຊູຈະໄດ້ຮັບຄວາມທຸກທໍລະມານດັ່ງທີ່ພຣະອົງໄດ້ຮັບຢູ່ເທິງໄມ້ກາງແຂນບໍ ຖ້າພຣະອົງບໍ່ໄດ້ປະຕິບັດຄວາມຈິງ? ພຣະອົງຈະໄດ້ອະທິຖານຢ່າງໂສກເສົ້າບໍ ຖ້າພຣະອົງບໍ່ໄດ້ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ? ດັ່ງນັ້ນ, ພວກເຈົ້າຄວນທົນທຸກເພື່ອການປະຕິບັດຄວາມຈິງ; ນີ້ແມ່ນລັກສະນະຂອງການທົນທຸກທີ່ມະນຸດຄວນອົດທົນ.

# ຜູ້ທີ່ໄດ້ຮັບຄວາມລອດພົ້ນ ແມ່ນຜູ້ທີ່ຍິນດີປະຕິບັດຕາມຄວາມຈິງ

ຄວາມຈຳເປັນໃນການມີຊີວິດຄຣິສຕະຈັກທີ່ດີກໍໄດ້ຖືກກ່າວໄວ້ໃນບົດເທດສະໜາຢູ່ເປັນປະຈຳ. ເປັນຫຍັງຊີວິດຂອງຄຣິສຕະຈັກຈຶ່ງຍັງບໍ່ດີຂຶ້ນ ແລະ ຍັງເປັນຄືເກົ່າ? ເປັນຫຍັງຈຶ່ງບໍ່ມີວິຖີຊີວິດອັນໃໝ່ ແລະ ທີ່ແຕກຕ່າງ? ແລ້ວເປັນເລື່ອງປົກກະຕິບໍທີ່ຄົນໃນສະຕະວັດທີ່ສິບເກົ້າຈະດຳລົງຊີວິດຄືຈັກກະພັດໃນຍຸກຜ່ານມາ? ເຖິງວ່າສິ່ງທີ່ຜູ້ຄົນກິນ ແລະ ດື່ມໃນຕອນນີ້ຄືອາຫານແຊບນົວທີ່ຈະຊີມລົດຊາດໄດ້ຍາກໃນຍຸກຜ່ານມາ ແຕ່ຍັງບໍ່ມີການປ່ຽນແປງຢ່າງໃຫຍ່ຫຼວງໃດໆໃນຊີວິດຄຣິສຕະຈັກ. ມັນບໍ່ຕ່າງຫຍັງກັບການເອົາເຫຼົ້າແວງເກົ່າໃສ່ໃນຂວດໃໝ່. ເປັນແບບນັ້ນແລ້ວ ການກ່າວຫຼາຍຄັ້ງຈາກພຣະເຈົ້າຈະມີປະໂຫຍດອັນໃດ? ຄຣິສຕະຈັກໃນບ່ອນສ່ວນໃຫຍ່ຍັງບໍ່ມີການປ່ຽນແປງເລີຍ. ເຮົາໄດ້ເຫັນກັບຕາຂອງເຮົາ ແລະ ມັນຈະແຈ້ງໃນໃຈຂອງເຮົາ; ເຖິງແມ່ນວ່າເຮົາຍັງບໍ່ທັນໄດ້ປະສົບກັບຊີວິດຂອງຄຣິສຕະຈັກດ້ວຍຕົນເອງ ເຮົາກໍຮູ້ສະພາບການຊຸມນຸມຂອງຄຣິສຕະຈັກປານຫຼັງມືຂອງເຮົາ. ພວກເຂົາບໍ່ມີຄວາມຄືບໜ້າຫຍັງຫຼາຍ. ມັນກັບໄປຄຳເວົ້ານັ້ນທີ່ວ່າ ມັນເປັນຄືກັບການໃສ່ເຫຼົ້າແວງເກົ່າເຂົ້າໃນຂວດໃໝ່. ບໍ່ມີຫຍັງປ່ຽນແປງ! ເມື່ອມີຄົນລ້ຽງດູພວກເຂົາ ພວກເຂົາກໍລຸກປານໄຟ ແຕ່ເມື່ອບໍ່ມີໃຜຊ່ວຍພວກເຂົາ ພວກເຂົາກໍເຢັນປານນໍ້າກ້ອນ. ມີໜ້ອຍຄົນທີ່ສາມາດເວົ້າກ່ຽວກັບສິ່ງທີ່ເປັນໄປໄດ້ ແລະ ບໍ່ຄ່ອຍມີຜູ້ໃດສາມາດຮັບເອົາຕຳແໜ່ງຜູ້ນຳໄດ້. ເຖິງແມ່ນວ່າການເທດສະໜາຈະດີງາມ ແຕ່ກໍຫາຍາກທີ່ຈະມີຄົນເຂົ້າເຖິງ. ໜ້ອຍຄົນຖະໜອມຮັກພຣະທຳຂອງພຣະເຈົ້າ. ພວກເຂົາຮ້ອງໄຫ້ເມື່ອພວກເຂົາຮັບເອົາພຣະທຳຂອງພຣະເຈົ້າ, ຍິ້ມແຍ້ມເມື່ອພວກເຂົາວາງພຣະທຳຂອງພຣະອົງລົງໄວ້ທາງຂ້າງ ແລະ ຂາດລົດຊາດ ແລະ ຂາດຄວາມສົດໃສເມື່ອພວກເຂົາອອກຈາກພຣະທຳນັ້ນ. ເວົ້າໃຫ້ຈະແຈ້ງກໍຄື ພວກເຈົ້າບໍ່ໄດ້ຖະໜອມຮັກພຣະທຳຂອງພຣະເຈົ້າເລີຍ ແລະ ພວກເຈົ້າບໍ່ເຄີຍເຫັນຄຸນຄ່າພຣະທຳທີ່ອອກມາຈາກປາກຂອງພຣະອົງໃນທຸກມື້ນີ້. ພວກເຈົ້າກັງວົນເມື່ອອ່ານພຣະທຳຂອງພຣະອົງ ແລະ ຮູ້ສຶກອິດເມື່ອຍເມື່ອທ່ອງຂຶ້ນໃຈ ແລະ ເມື່ອເຖິງເວລານຳເອົາພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ, ມັນກໍຄືກັນກັບການພະຍາຍາມຕັກຈັກນໍ້າສ້າງໂດຍດຶງມັນດ້ວຍເສັ້ນຂົນຈາກຫາງມ້າ, ບໍ່ວ່າພວກເຈົ້າຈະພະຍາຍາມຫຼາຍພຽງໃດກໍຕາມ ພວກເຈົ້າກໍຈະບໍ່ສາມາດດຶງມັນໄດ້ຢ່າງເຕັມກຳລັງ. ພວກເຈົ້າຮູ້ສຶກມີກຳລັງຕະຫຼອດເມື່ອອ່ານພຣະທຳຂອງພຣະເຈົ້າ ແຕ່ຫຼົງລືມເມື່ອນຳໄປປະຕິບັດ. ທີ່ຈິງແລ້ວ ພຣະທຳເຫຼົ່ານີ້ບໍ່ຈຳເປັນຕ້ອງຖືກເວົ້າດ້ວຍຄວາມພະຍາຍາມ ແລະ ຊໍ້າໄປຊໍ້າມາຢ່າງອົດທົນ; ແຕ່ຄວາມຈິງທີ່ວ່າຄົນມີແຕ່ຟັງໂດຍບໍ່ເອົາພຣະທຳຂອງພຣະເຈົ້າມາປະຕິບັດໄດ້ກາຍເປັນອຸປະສັກໃຫ້ແກ່ພາລະກິດຂອງພຣະເຈົ້າ. ເຮົາຈະບໍ່ຍົກຂຶ້ນມາເວົ້າບໍ່ໄດ້, ເຮົາຈະບໍ່ເວົ້າກ່ຽວກັບມັນບໍ່ໄດ້. ເຮົາຈຳເປັນຕ້ອງໄດ້ເວົ້າ; ບໍ່ແມ່ນເຮົາມີຄວາມສຸກກັບການເປີດເຜີຍຄວາມອ່ອນແອຂອງຄົນອື່ນ. ພວກເຈົ້າຄິດວ່າ ການປະຕິບັດຂອງພວກເຈົ້າພຽງພໍຢ່າງບໍ່ຫຼາຍກໍໜ້ອຍ ແລະ ເມື່ອການເປີດໂປງຮອດຈຸດສູງສຸດ ພວກເຈົ້າຈະໄດ້ເຂົ້າໄປສູ່ຈຸດສູງສຸດນັ້ນບໍ? ມັນງ່າຍປານນັ້ນພຸ້ນບໍ? ພວກເຈົ້າບໍ່ເຄີຍສຳຫຼວດເບິ່ງພື້ນຖານທີ່ປະສົບການ

ຂອງພວກເຈົ້າຖືກສ້າງຂຶ້ນໃນທີ່ສຸດ! ໃນຕອນນີ້ ການຊຸມນຸມຂອງພວກເຈົ້າບໍ່ສາມາດຖືກເອີ້ນໄດ້ວ່າເປັນຊີວິດຄຣິສຕະຈັກທີ່ເໝາະສົມ ຫຼື ເປັນຊີວິດທາງຈິດວິນຍານທີ່ເໝາະສົມແມ່ນແຕ່ໜ້ອຍເລີຍ. ມັນເປັນພຽງການເຕົ້າໂຮມຂອງກຸ່ມຄົນທີ່ມັກໂອ້ລົມ ແລະ ຮ້ອງເພງ. ໃນຄວາມເປັນຈິງແລ້ວແມ່ນບໍ່ມີຄວາມເປັນຈິງຫຼາຍໃນການເຕົ້າໂຮມນັ້ນ. ເວົ້າຢ່າງຈະແຈ້ງກໍຄື ຖ້າເຈົ້າບໍ່ປະຕິບັດຕາມຄວາມຈິງແລ້ວຄວາມເປັນຈິງນັ້ນຢູ່ໃສ? ການທີ່ເຈົ້າເວົ້າວ່າເຈົ້າມີຄວາມເປັນຈິງ ບໍ່ແມ່ນເປັນການໂອ້ອວດບໍ? ບັນດາຜູ້ທີ່ປະຕິບັດພາລະກິດກໍພາກັນໂອ້ອວດ ແລະ ຈອງຫອງ ໃນຂະນະທີ່ຜູ້ເຊື່ອຟັງພັດມິດງຽບ ແລະກົ້ມຫົວຢູ່ ໂດຍບໍ່ມີໂອກາດເຝິກຫັດ. ຜູ້ທີ່ເຮັດພາລະກິດ ແມ່ນບໍ່ເຮັດຫຍັງ ນອກຈາກມີແຕ່ເວົ້າ, ເວົ້າແລ້ວເວົ້າອີກດ້ວຍຄຳເວົ້າທີ່ຟັງສູງສົ່ງຂອງພວກເຂົາ ແລະ ຜູ້ຕິດຕາມກໍມີແຕ່ຟັງ. ບໍ່ມີການປ່ຽນແປງຫຍັງທີ່ຈະເວົ້າເຖິງເລີຍ; ສິ່ງທັງໝົດເຫຼົ່ານີ້ເປັນແນວທາງໃນອະດີດ! ໃນທຸກມື້ນີ້ ການທີ່ເຈົ້າຍອມຈຳນົນ ແລະ ບໍ່ກ້າແຊກແຊງ ຫຼື ກະທຳການຕາມໃຈຕົວເອງແມ່ນຍ້ອນການມາຂອງພຣະດຳລັດແຫ່ງການປົກຄອງຂອງພຣະເຈົ້າ; ມັນບໍ່ແມ່ນການປ່ຽນແປງທີ່ເຈົ້າໄດ້ມາຜ່ານປະສົບການ. ເຫດທີ່ເຈົ້າບໍ່ກ້າເຮັດບາງສິ່ງທີ່ເປັນການລະເມີດພຣະທຳດຳລັດແຫ່ງການປົກຄອງໃນປັດຈຸບັນແມ່ນຍ້ອນວ່າພາລະກິດຂອງພຣະເຈົ້າໄດ້ມີຜົນທີ່ຊັດເຈນ ແລະ ໄດ້ເອົາຊະນະຄົນ. ເຮົາຂໍຖາມບາງຄົນແດ່: ຄວາມສຳເລັດຂອງເຈົ້າໃນທຸກມື້ນີ້ ມີຫຼາຍສໍ່າໃດທີ່ໄດ້ມາດ້ວຍນໍ້າເຫື່ອນໍ້າແຮງໃນການເຮັດວຽກໜັກຂອງເຈົ້າ? ມີຫຼາຍສໍ່າໃດແດ່ທີ່ພຣະເຈົ້າບອກເຈົ້າໂດຍກົງ? ເຈົ້າຈະຕອບແນວໃດ? ເຈົ້າຈະບໍ່ຕົກສະເງີ້ ແລະ ປາກບໍ່ອອກບໍ? ເປັນຫຍັງຜູ້ອື່ນຈຶ່ງສາມາດເວົ້າກ່ຽວກັບປະສົບການຕົວຈິງທັງຫຼາຍຂອງພວກເຂົາເພື່ອຫຼໍ່ລ້ຽງເຈົ້າ ໃນຂະນະທີ່ເຈົ້າມີແຕ່ກິນອາຫານທີ່ຄົນອື່ນປຸງແຕ່ງ? ເຈົ້າບໍ່ຮູ້ສຶກອັບອາຍບໍ? ພວກເຈົ້າອາດຈະດຳເນີນການກວດກາຄວາມແທ້ຈິງ ໂດຍກວດກາເບິ່ງຄົນທີ່ດີພໍສົມຄວນ: ເຈົ້າເຂົ້າໃຈຄວາມຈິງຫຼາຍເທົ່າໃດ? ໃນທີ່ສຸດແລ້ວເຈົ້າປະຕິບັດຫຼາຍເທົ່າໃດ? ເຈົ້າຮັກໃຜຫຼາຍກວ່າກັນ, ພຣະເຈົ້າ ຫຼື ໂຕເຈົ້າເອງ? ເຈົ້າເປັນຜູ້ໃຫ້ຫຼາຍກວ່າ ຫຼື ເປັນຜູ້ຮັບຫຼາຍກວ່າ? ມີຈັກເທື່ອທີ່ເຈົ້າໄດ້ປະຖິ້ມຕົວຕົນເກົ່າຂອງເຈົ້າ ແລະ ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ເມື່ອເຈດຕະນາຂອງເຈົ້າຜິດ? ພຽງແຕ່ສອງສາມຄຳຖາມເຫຼົ່ານີ້ກໍຈະເຮັດໃຫ້ຫຼາຍຄົນສັບສົນແລ້ວ. ສຳລັບຄົນສ່ວນຫຼາຍ ເຖິງພວກເຂົາຮູ້ວ່າເຈດຕະນາຂອງພວກເຂົາຜິດ ພວກເຂົາກໍຍັງຕັ້ງໃຈກະທຳຜິດ ແລະ ຍັງໄກທີ່ພວກເຂົາຈະປະຖິ້ມເນື້ອໜັງຂອງຕົວເອງ. ຄົນສ່ວນຫຼາຍປ່ອຍໃຫ້ຄວາມບາບແຜ່ຂະຫຍາຍໃນຕົນເອງ ໂດຍປ່ອຍໃຫ້ຄວາມບາບບົງການທຸກການກະທຳຂອງຕົນ. ພວກເຂົາບໍ່ສາມາດເອົາຊະນະຄວາມບາບຂອງພວກເຂົາໄດ້ ແລະ ພວກເຂົາສືບຕໍ່ດຳລົງຊີວິດຢູ່ໃນຄວາມບາບ. ມາຮອດຂັ້ນນີ້ແລ້ວ ມີຜູ້ໃດແດ່ທີ່ຍັງບໍ່ຮູ້ວ່າຕົນໄດ້ເຮັດບາບຈັກເທື່ອ? ຖ້າເຈົ້າເວົ້າວ່າເຈົ້າບໍ່ຮູ້ ເຮົາກໍຈະເວົ້າວ່າ ເຈົ້າກຳລັງຕົວະ. ເວົ້າຕົງໆກໍຄື ມັນແມ່ນຄວາມບໍ່ເຕັມໃຈທີ່ຈະຍອມປະຖິ້ມຕົວຕົນເກົ່າຂອງເຈົ້າເອງ. ມັນມີປະໂຫຍດຫຍັງທີ່ຈະກ່າວ "ຄຳສາລະພາບບາບຈາກໃຈ" ທີ່ບໍ່ມີຄຸນຄ່າ? ສິ່ງນີ້ຈະຊ່ວຍໃຫ້ເຈົ້າເຕີບໃຫຍ່ໃນຊີວິດຂອງເຈົ້າບໍ? ສາມາດເວົ້າໄດ້ວ່າ ການຮູ້ຈັກຕົນເອງນັ້ນເປັນວຽກເຕັມເວລາຂອງເຈົ້າ. ເຮົາເຮັດໃຫ້ຄົນສົມບູນຜ່ານການອ່ອນນ້ອມຂອງພວກເຂົາ ແລະ ການທີ່ພວກເຂົາປະຕິບັດຕາມພຣະທຳຂອງພຣະເຈົ້າ. ຖ້າເຈົ້າສວມໃສ່ພຣະທຳ

ຂອງພຣະເຈົ້າຄືກັບການສ່ວມໃສ່ເຄື່ອງນຸ່ງ ເພື່ອໃຫ້ໂກ້ ແລະ ໂດດເດັ່ນ, ບໍ່ແມ່ນເຈົ້າກຳລັງຕົວະຕົນເອງ ແລະ ຄົນອື່ນຢູ່ບໍ? ຖ້າເຈົ້າມີແຕ່ເວົ້າ ແຕ່ບໍ່ເຄີຍປະຕິບັດ ເຈົ້າຈະໄດ້ປະໂຫຍດຫຍັງ?

ຫຼາຍຄົນສາມາດເວົ້າກ່ຽວກັບການປະຕິບັດໄດ້ເລັກນ້ອຍ ແລະ ພວກເຂົາສາມາດເວົ້າກ່ຽວກັບຄວາມປະທັບໃຈສ່ວນຕົວຂອງພວກເຂົາ ແຕ່ສ່ວນຫຼາຍແມ່ນແສງສະຫວ່າງທີ່ໄດ້ຮັບຈາກຖ້ອຍຄຳຂອງຄົນອື່ນ. ມັນບໍ່ໄດ້ລວມເອົາສິ່ງທີ່ມາຈາກການປະຕິບັດສ່ວນຕົວຂອງພວກເຂົາເລີຍ ທັງບໍ່ໄດ້ລວມເອົາສິ່ງທີ່ພວກເຂົາເຫັນຜ່ານປະສົບການຂອງພວກເຂົາ. ເຮົາໄດ້ວິເຄາະປະເດັນນີ້ຢ່າງລະອຽດມາກ່ອນແລ້ວ; ຢ່າຄິດວ່າເຮົາບໍ່ຮູ້ຫຍັງ. ເຈົ້າເປັນພຽງເສືອເຈັ້ຍ ແຕ່ເຈົ້າເວົ້າເລື່ອງເອົາຊະນະຊາຕານ, ເລື່ອງຄຳພະຍານແຫ່ງໄຊຊະນະ ແລະ ເລື່ອງການສະທ້ອນລັກສະນະຂອງພຣະເຈົ້າ? ທັງໝົດນີ້ໄຮ້ສາລະ! ເຈົ້າຄິດວ່າພຣະທຳທັງໝົດທີ່ພຣະເຈົ້າກ່າວໃນທຸກມື້ນີ້ແມ່ນເພື່ອໃຫ້ເຈົ້າຊື່ນຊົມບໍ? ປາກຂອງເຈົ້າເວົ້າເລື່ອງການປະຖິ້ມຕົວຕົນເກົ່າຂອງຕົວເອງ ແລະ ການປະຕິບັດຕາມຄວາມຈິງ ແຕ່ມືຂອງເຈົ້າກຳລັງກະທຳສິ່ງອື່ນ ແລະ ຈິດໃຈຂອງເຈົ້າກໍກຳລັງຄິດແຜນການອື່ນຢູ່ ແລ້ວເຈົ້າເປັນຄົນປະເພດໃດ? ເປັນຫຍັງຈິດໃຈ ແລະ ມືຂອງເຈົ້າຈຶ່ງບໍ່ຄືກັນ ແລະ ເປັນອັນໜຶ່ງອັນດຽວກັນ? ການເທດສະໜາຫຼາຍຄັ້ງກາຍເປັນພຽງຄຳເວົ້າທີ່ວ່າງເປົ່າ; ສິ່ງນີ້ບໍ່ໜ້າເສົ້າບໍ? ຖ້າເຈົ້າບໍ່ສາມາດປະຕິບັດຕາມພຣະທຳຂອງພຣະເຈົ້າ ມັນກໍສະແດງໃຫ້ເຫັນວ່າເຈົ້າຍັງບໍ່ທັນໄດ້ເຂົ້າສູ່ທາງທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ, ເຈົ້າຍັງບໍ່ທັນມີພາລະກິດຂອງພຣະວິນຍານບໍລິສຸດໃນໂຕເຈົ້າ ແລະ ເຈົ້າຍັງບໍ່ໄດ້ຮັບການນຳທາງຈາກພຣະອົງເທື່ອ. ຖ້າເຈົ້າເວົ້າວ່າ ເຈົ້າສາມາດເຂົ້າໃຈພຣະທຳຂອງພຣະເຈົ້າເທົ່ານັ້ນ ແຕ່ບໍ່ສາມາດປະຕິບັດຕາມ ເຈົ້າກໍເປັນຄົນທີ່ບໍ່ຮັກຄວາມຈິງ. ພຣະເຈົ້າບໍ່ໄດ້ສະເດັດມາເພື່ອຊ່ວຍຄົນປະເພດນີ້ໃຫ້ພົ້ນ. ພຣະເຢຊູທົນທຸກກັບຄວາມເຈັບປວດແສນສາຫັດ ເມື່ອພຣະອົງຖືກຄຶງເທິງໄມ້ກາງແຂນເພື່ອຊ່ວຍຄົນບາບ, ເພື່ອຊ່ວຍຄົນທຸກຍາກ ແລະ ເພື່ອຊ່ວຍທຸກຄົນທີ່ຖ່ອມຕົນໃຫ້ລອດພົ້ນ. ການຖືກຄຶງຂອງພຣະອົງເຮັດໜ້າທີ່ເປັນເຄື່ອງບູຊາໄຖ່ບາບ. ຖ້າເຈົ້າບໍ່ສາມາດປະຕິບັດຕາມພຣະທຳຂອງພຣະເຈົ້າ ເຈົ້າກໍຄວນອອກໄປໃຫ້ໄວເທົ່າທີ່ຈະໄວໄດ້; ຢ່າຢູ່ລ້າໆໃນເຮືອນຂອງພຣະເຈົ້າ ຄືຄົນເອົາປຽບຄົນອື່ນ. ຫຼາຍຄົນເຖິງກັບເຫັນວ່າມັນເປັນເລື່ອງຍາກທີ່ຈະຢຸດກະທຳສິ່ງທີ່ເຫັນຢ່າງຊັດເຈນວ່າເປັນການຕໍ່ຕ້ານພຣະເຈົ້າ. ບໍ່ແມ່ນພວກເຂົາຢາກຕາຍບໍ? ພວກເຂົາສາມາດເວົ້າເຖິງການເຂົ້າສູ່ອານາຈັກຂອງພຣະເຈົ້າໄດ້ຢ່າງໃດ? ພວກເຂົາຈະກ້າສູ້ໜ້າພຣະອົງບໍ? ເຈົ້າກິນອາຫານທີ່ພຣະອົງຈັດກຽມໃຫ້, ກະທຳສິ່ງຜິດບາບທີ່ຕໍ່ຕ້ານພຣະອົງ, ປອງຮ້າຍ, ຫຼອກລວງ, ແລະ ໃຊ້ກົນອຸບາຍ ໃນຂະນະທີ່ພຣະເຈົ້າອະນຸຍາດໃຫ້ເຈົ້າໄດ້ຮັບພອນທີ່ພຣະອົງປະທານໃຫ້ເຈົ້າ. ເຈົ້າບໍ່ຮູ້ສຶກບໍວ່າ ພອນເຫຼົ່ານັ້ນໄໝ້ມືຂອງເຈົ້າ ເມື່ອເຈົ້າຮັບເອົາພວກມັນ? ເຈົ້າບໍ່ຮູ້ສຶກໜ້າແດງບໍ? ເຈົ້າກະທຳບາງສິ່ງທີ່ຕໍ່ຕ້ານພຣະເຈົ້າ, ໃຊ້ກົນອຸບາຍເພື່ອ "ຫຼອກລວງ", ເຈົ້າບໍ່ຮູ້ສຶກຢ້ານບໍ? ຖ້າເຈົ້າບໍ່ຮູ້ສຶກຫຍັງ ເຈົ້າຈະເວົ້າກ່ຽວກັບອະນາຄົດໄດ້ແນວໃດ? ບໍ່ມີອະນາຄົດສຳລັບເຈົ້າຕັ້ງແຕ່ດົນແລ້ວ, ເຈົ້າຍັງຈະຄາດຫວັງອັນໃດອີກ? ຖ້າເຈົ້າເວົ້າໃນສິ່ງທີ່ໜ້າອັບອາຍ ແຕ່ເຈົ້າບໍ່ຮູ້ສຶກຜິດ ແລະ ໃຈຂອງເຈົ້າບໍ່ຮູ້ຈັກສຳນຶກ, ຖ້າເປັນດັ່ງນັ້ນ ມັນບໍ່ໝາຍຄວາມວ່າ ເຈົ້າຖືກພຣະເຈົ້າປະຖິ້ມແລ້ວບໍ? ເຈົ້າກາຍເປັນຄົນທີ່ເວົ້າ ແລະ ກະທຳຕາມໃຈ ແລະ ຂາດວິໄນໂດຍທຳມະຊາດ; ເຈົ້າຈະ

ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າໃນສະພາບນີ້ໄດ້ແນວໃດ? ເຈົ້າຈະສາມາດເອົາຊະນະໂລກໄດ້ບໍ? ຜູ້ໃດຈະເຊື່ອເຈົ້າ? ຜູ້ທີ່ຮູ້ທາດແທ້ຂອງເຈົ້າຈະໜີຫ່າງຈາກເຈົ້າ. ນີ້ບໍ່ແມ່ນການລົງໂທດຂອງພຣະເຈົ້າບໍ? ເວົ້າລວມແລ້ວ ຖ້າມີແຕ່ຄຳເວົ້າ ແລະ ບໍ່ມີການປະຕິບັດ ກໍຈະບໍ່ມີການເຕີບໃຫຍ່. ເຖິງແມ່ນວ່າພຣະວິນຍານບໍລິສຸດຈະດຳເນີນພາລະກິດໃນຕົວເຈົ້າໃນຂະນະທີ່ເຈົ້າເວົ້າ ແຕ່ຖ້າເຈົ້າບໍ່ປະຕິບັດຕາມ, ພຣະວິນຍານບໍລິສຸດກໍຈະຢຸດປະຕິບັດໃນຕົວເຈົ້າ. ຖ້າເຈົ້າສືບຕໍ່ເປັນແບບນີ້ ເຈົ້າຈະເວົ້າກ່ຽວກັບອະນາຄົດ ຫຼື ມອບຊີວິດທັງໝົດໃຫ້ແກ່ພາລະກິດຂອງພຣະເຈົ້າໄດ້ຢ່າງໃດ? ເຈົ້າສາມາດເວົ້າເຖິງການມອບການເປັນຢູ່ທັງໝົດຂອງເຈົ້າເທົ່ານັ້ນ ແຕ່ເຈົ້າບໍ່ໄດ້ມອບຄວາມຮັກທີ່ແທ້ຈິງຂອງເຈົ້າໃຫ້ກັບພຣະເຈົ້າ. ທຸກສິ່ງທີ່ພຣະອົງໄດ້ຮັບຈາກເຈົ້າຄືຄວາມອຸທິດດ້ວຍຄຳເວົ້າ; ພຣະອົງບໍ່ໄດ້ຮັບເຈດຕະນາໃນການປະຕິບັດຄວາມຈິງຂອງເຈົ້າ. ສິ່ງນີ້ແມ່ນວຸດທິພາວະທີ່ແທ້ຈິງຂອງເຈົ້າບໍ? ຖ້າເຈົ້າຍັງສືບຕໍ່ເປັນແບບນີ້ ແລ້ວເມື່ອໃດເຈົ້າຈະໄດ້ຮັບການເຮັດໃຫ້ສົມບູນໂດຍພຣະເຈົ້າ? ເຈົ້າບໍ່ກັງວົນກ່ຽວກັບອະນາຄົດທີ່ມືດມົນ ແລະ ເສົ້າໝອງຂອງເຈົ້າບໍ? ເຈົ້າບໍ່ຮູ້ສຶກບໍວ່າ ພຣະເຈົ້າໝົດຫວັງໃນໂຕເຈົ້າແລ້ວ? ເຈົ້າບໍ່ຮູ້ບໍວ່າພຣະເຈົ້າປາດຖະໜາທີ່ຈະເຮັດໃຫ້ຄົນໃໝ່ຫຼາຍຄົນສົມບູນ? ແລ້ວສິ່ງເກົ່າຈະສາມາດດຳລົງຢູ່ໄດ້ດ້ວຍຕົວພວກມັນເອງບໍ? ເຈົ້າບໍ່ເອົາໃຈໃສ່ພຣະທຳຂອງພຣະເຈົ້າໃນມື້ນີ້: ແລ້ວເຈົ້າກຳລັງລໍຖ້າມື້ອື່ນບໍ?

# ສິ່ງທີ່ຜູ້ນຳພາທີ່ເໝາະສົມຄວນມີ

ເຈົ້າຕ້ອງມີຄວາມເຂົ້າໃຈກ່ຽວກັບສະພາບການຕ່າງໆຂອງຜູ້ຄົນທີ່ຈະພະເຊີນ ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດໃນພວກເຂົາ. ໂດຍສະເພາະຜູ້ຄົນເຫຼົ່ານັ້ນທີ່ປະສານງານເພື່ອຮັບໃຊ້ພຣະເຈົ້າຕ້ອງມີຄວາມເຂົ້າໃຈທີ່ໜັກແໜ້ນຍິ່ງຂຶ້ນກ່ຽວກັບສະພາວະເຫຼົ່ານີ້. ຖ້າເຈົ້າພຽງແຕ່ເວົ້າກ່ຽວກັບປະສົບການ ແລະ ວິທີທາງທັງຫຼາຍໃນການເຂົ້າສູ່, ມັນກໍສະແດງໃຫ້ເຫັນວ່າ ປະສົບການຂອງເຈົ້າແມ່ນມາຈາກມຸມມອງດ້ານດຽວ. ຖ້າບໍ່ຮູ້ຈັກສະພາບການທີ່ແທ້ຈິງຂອງເຈົ້າ ຫຼື ເຂົ້າໃຈບັນດາຫຼັກການຂອງຄວາມຈິງ, ມັນກໍເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ການປ່ຽນແປງອຸປະນິໄສນັ້ນສຳເລັດ. ຖ້າບໍ່ຮູ້ບັນດາຫຼັກການຂອງພາລະກິດຂອງພຣະວິນຍານບໍລິສຸດ ຫຼື ຖ້າບໍ່ເຂົ້າໃຈກ່ຽວກັບໝາກຜົນທີ່ເກີດຈາກພາລະກິດນັ້ນ, ມັນກໍຍາກສຳລັບເຈົ້າທີ່ຈະເບິ່ງເຫັນວຽກງານຂອງວິນຍານຊົ່ວຮ້າຍນັ້ນໄດ້. ເຈົ້າຕ້ອງເປີດເຜີຍວຽກງານຂອງວິນຍານຊົ່ວຮ້າຍ ແລະ ຄວາມຄິດຂອງມະນຸດ ແລະ ເລັ່ງໃສ່ໃຈກາງຂອງບັນຫາ; ພ້ອມນີ້ ເຈົ້າກໍຕ້ອງຊີ້ໃຫ້ເຫັນຄວາມນອກຮູ້ນອກທາງຫຼາຍຢ່າງໃນການປະຕິບັດ ຫຼື ບັນຫາຂອງຜູ້ຄົນທີ່ພວກເຂົາອາດມີ ໃນການເຊື່ອໃນພຣະເຈົ້າ ເພື່ອພວກເຂົາອາດຈະຮັບຮູ້ສິ່ງເຫຼົ່ານັ້ນ. ຢ່າງໜ້ອຍທີ່ສຸດ, ເຈົ້າບໍ່ຕ້ອງເຮັດໃຫ້ພວກເຂົາຮູ້ສຶກບໍ່ດີ ຫຼື ຢູ່ຊື່ໆ. ຢ່າງໃດກໍຕາມ, ເຈົ້າຕ້ອງເຂົ້າໃຈຄວາມລຳບາກແທ້ຈິງທີ່ຜູ້ຄົນສ່ວນໃຫຍ່ມີ, ເຈົ້າບໍ່ຕ້ອງໄຮ້ເຫດຜົນ ຫຼື “ພະຍາຍາມສອນໝູໃຫ້ຮ້ອງເພງ”; ນັ້ນແມ່ນການປະພຶດຂອງຄົນທີ່ໂງ່ຈ້າ. ເພື່ອແກ້ໄຂບັນຫາທັງຫຼາຍຂອງມະນຸດມີ, ເຈົ້າຕ້ອງເຂົ້າໃຈເຖິງພະລັງຂອງພາລະກິດຂອງພຣະວິນຍານບໍລິສຸດ, ເຈົ້າຕ້ອງເຂົ້າໃຈວິທີການປະຕິບັດພາລະກິດຂອງພຣະວິນຍານບໍລິສຸດທີ່ມີຕໍ່ຜູ້ຄົນທີ່ແຕກຕ່າງກັນ, ເຈົ້າຕ້ອງເຂົ້າໃຈຄວາມລຳບາກຂອງມະນຸດ, ຂໍ້ບົກຜ່ອງຂອງມະນຸດ, ເບິ່ງເຫັນປະເດັນສຳຄັນຂອງບັນຫາ ແລະ ເຂົ້າເຖິງຕົ້ນຕໍຂອງບັນຫາ ໂດຍບໍ່ມີຄວາມນອກຮູ້ນອກທາງ ຫຼື ຂໍ້ຜິດພາດ. ມີແຕ່ຄົນປະເພດນີ້ເທົ່ານັ້ນ ທີ່ມີຄຸນນະສົມບັດໃນການປະສານງານເພື່ອຮັບໃຊ້ພຣະເຈົ້າ.

ເຈົ້າຈະສາມາດເຂົ້າໃຈບັນຫາຫຼັກ ແລະ ເຫັນຫຼາຍສິ່ງຢ່າງຊັດເຈນ ຫຼື ບໍ່ ແມ່ນຂຶ້ນກັບປະສົບການສ່ວນຕົວຂອງເຈົ້າ. ລັກສະນະທີ່ເຈົ້າມີປະສົບການຄືລັກສະນະທີ່ເຈົ້ານຳພາຜູ້ອື່ນ. ຖ້າເຈົ້າເຂົ້າໃຈໜັງສື ແລະ ທິດສະດີຕ່າງໆ, ເຈົ້າກໍຈະນຳພາຜູ້ອື່ນໃຫ້ເຂົ້າໃຈໜັງສື ແລະ ທິດສະດີຕ່າງໆ. ວິທີທີ່ເຈົ້າມີປະສົບການກັບໂລກແຫ່ງຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ ແມ່ນວິທີການທີ່ເຈົ້າຈະນຳພາຜູ້ອື່ນເພື່ອໃຫ້ເຂົ້າໄປສູ່ໂລກແຫ່ງຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ. ຖ້າເຈົ້າສາມາດເຂົ້າໃຈຄວາມຈິງທັງຫຼາຍນີ້ ແລະ ແນມເຫັນຫຼາຍສິ່ງໃນພຣະທຳຂອງພຣະເຈົ້າຢ່າງຊັດເຈນ, ເຈົ້າກໍຈະສາມາດນຳພາຜູ້ອື່ນໃຫ້ເຂົ້າໃຈຄວາມຈິງທັງຫຼາຍ ແລະ ຄົນເຫຼົ່ານັ້ນທີ່ເຈົ້ານຳພາກໍຈະມີຄວາມເຂົ້າໃຈຕໍ່ນິມິດຢ່າງຊັດເຈນ. ຖ້າເຈົ້າຕັ້ງໃຈໃສ່ກັບຄວາມຮູ້ສຶກທີ່ເໜືອທຳມະຊາດ, ຄົນເຫຼົ່ານັ້ນທີ່ເຈົ້ານຳພາກໍຈະຕັ້ງໃຈໃສ່ກັບຄວາມຮູ້ສຶກທີ່ເໜືອທຳມະຊາດເຊັ່ນກັນ. ຖ້າເຈົ້າບໍ່ເອົາໃຈໃສ່ກັບການປະຕິບັດ ແລະ ພຽງເນັ້ນໃສ່ແຕ່ການເວົ້າ, ຄົນເຫຼົ່ານັ້ນທີ່ເຈົ້ານຳພາກໍຈະຕັ້ງໃຈໃສ່ແຕ່ກັບການເວົ້າ ໂດຍບໍ່ມີການປະຕິບັດຫຍັງ, ບໍ່ປ່ຽນແປງນິໄສຂອງພວກເຂົາ ແລະ ພວກເຂົາກໍຈະໄດ້ແຕ່ກະຕືລືລົ້ນກັບສິ່ງທີ່ຢູ່ພາຍນອກເທົ່ານັ້ນ

ໂດຍບໍ່ມີການປະຕິບັດຄວາມຈິງເລີຍ. ມະນຸດທັງໝົດແມ່ນສະໜອງສິ່ງທີ່ພວກເຂົາມີໃຫ້ແກ່ຄົນອື່ນ. ປະເພດຂອງຄົນຈະກຳນົດເສັ້ນທາງທີ່ເຂົານຳພາຄົນອື່ນ ແລະ ປະເພດຂອງຄົນຈະກຳນົດປະເພດຂອງຄົນທີ່ເຂົານຳພາ. ການທີ່ຈະເປັນຄົນເໝາະສົມຢ່າງແທ້ຈິງເພື່ອໃຫ້ພຣະເຈົ້ານຳໃຊ້, ພວກເຈົ້າບໍ່ພຽງແຕ່ຈະຕ້ອງມີຄວາມທະເຍີທະຍານ ແຕ່ພວກເຈົ້າຍັງຈຳເປັນຕ້ອງໄດ້ຮັບຄວາມສະຫວ່າງຢ່າງຫຼາຍຈາກພຣະເຈົ້າ, ການຊີ້ນຳຈາກພຣະທຳຂອງພຣະເຈົ້າ, ການຈັດການຈາກພຣະເຈົ້າ ແລະ ການຫຼໍ່ຫຼອມຈາກພຣະທຳຂອງພຣະອົງ. ດ້ວຍພື້ນຖານດັ່ງກ່າວນີ້, ໃນເວລາປົກກະຕິ ພວກເຈົ້າຄວນເອົາໃຈໃສ່ຕໍ່ການສັງເກດ, ຄວາມຄິດ, ການໄຕ່ຕອງ ແລະ ການສະຫຼຸບ ແລະ ຮັບເອົາການຊົມຊັບ ຫຼື ການລົບລ້າງຂອງຕົວເຈົ້າເອງອີງຕາມສິ່ງນັ້ນ. ສິ່ງທັງໝົດເຫຼົ່ານີ້ລ້ວນແລ້ວແຕ່ແມ່ນເສັ້ນທາງ ສຳລັບພວກເຈົ້າໃນການເຂົ້າສູ່ໂລກແຫ່ງຄວາມເປັນຈິງ ແລະ ພວກມັນທັງໝົດແມ່ນສິ່ງທີ່ຂາດບໍ່ໄດ້ ເຊິ່ງນີ້ແມ່ນວິທີທາງໃນການປະຕິບັດພາລະກິດຂອງພຣະເຈົ້າ. ຖ້າເຈົ້າເຂົ້າໄປສູ່ວິທີທາງນີ້ຂອງການປະຕິບັດພາລະກິດຂອງພຣະເຈົ້າ, ເຈົ້າກໍຈະໄດ້ມີໂອກາດທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າທຸກມື້. ໃນເວລາໃດໜຶ່ງ, ບໍ່ວ່າຈະຢູ່ໃນສະພາບແວດລ້ອມທີ່ໂຫດຮ້າຍ ຫຼື ສະພາບແວດລ້ອມທີ່ດີ, ບໍ່ວ່າເຈົ້າຈະຖືກທົດສອບ ຫຼື ຖືກລໍ້ລວງ, ບໍ່ວ່າເຈົ້າຈະເຮັດວຽກງານ ຫຼື ບໍ່, ບໍ່ວ່າເຈົ້າຈະດຳລົງຊີວິດໃນຖານະບຸກຄົນ ຫຼື ເປັນກຸ່ມ, ເຈົ້າຈະຊອກເຫັນໂອກາດທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າສະເໝີ ໂດຍບໍ່ສູນເສຍແມ່ນແຕ່ສິ່ງດຽວ. ເຈົ້າຈະສາມາດຄົ້ນພົບພວກມັນທັງໝົດ ແລະ ດ້ວຍວິທີນີ້ ເຈົ້າກໍຈະພົບເຫັນຄວາມລັບໃນການປະສົບກັບພຣະທຳຂອງພຣະເຈົ້າ.

# ວ່າດ້ວຍເລື່ອງປະສົບການ

ຕະຫຼອດທັງປະສົບການຂອງເປໂຕ, ເພິ່ນໄດ້ປະສົບກັບການທົດລອງຫຼາຍຮ້ອຍປະການ. ເຖິງແມ່ນວ່າ ຄົນໃນປັດຈຸບັນຮັບຮູ້ເຖິງຄຳວ່າ "ການທົດລອງ", ແຕ່ພວກເຂົາກໍສັບສົນເມື່ອເວົ້າເຖິງຄວາມໝາຍ ແລະ ສະພາບການທີ່ແທ້ຈິງຂອງມັນ. ພຣະເຈົ້າເຮັດໃຫ້ຄວາມຕັ້ງໃຈຂອງຜູ້ຄົນໜັກແໜ້ນຂຶ້ນ, ຫຼໍ່ຫຼອມຄວາມໝັ້ນໃຈຂອງພວກເຂົາ ແລະ ເຮັດໃຫ້ທຸກສ່ວນຂອງພວກເຂົານັ້ນສົມບູນແບບຂຶ້ນ ແລະ ສ່ວນໃຫຍ່ແລ້ວ ສິ່ງນີ້ແມ່ນບັນລຸຜ່ານການທົດລອງ ເຊິ່ງກໍຍັງເປັນພາລະກິດທີ່ລີ້ລັບຂອງພຣະວິນຍານບໍລິສຸດ. ເບິ່ງຄືກັບວ່າ ພຣະເຈົ້າໄດ້ປະຖິ້ມຜູ້ຄົນແລ້ວ ສະນັ້ນ ຖ້າພວກເຂົາບໍ່ລະມັດລະວັງ, ພວກເຂົາກໍຈະເຫັນການທົດລອງເຫຼົ່ານີ້ເປັນສິ່ງລໍ້ໃຈຂອງຊາຕານ. ຕາມຄວາມຈິງແລ້ວ ການທົດລອງຫຼາຍຢ່າງຖືໄດ້ວ່າເປັນສິ່ງລໍ້ໃຈ ແລະ ສິ່ງນີ້ກໍເປັນຫຼັກການ ແລະ ກົດລະບຽບທີ່ພຣະເຈົ້າປະຕິບັດພາລະກິດ. ຖ້າຜູ້ຄົນດຳລົງຊີວິດໃນການສະຖິດຂອງພຣະເຈົ້າຢ່າງແທ້ຈິງ, ພວກເຂົາກໍຈະເຫັນວ່າສິ່ງດັ່ງກ່າວເປັນການທົດລອງທີ່ມາຈາກພຣະເຈົ້າ ແລະ ຈະບໍ່ປ່ອຍໃຫ້ພວກມັນຫຼຸດໄປ. ຖ້າຄົນໜຶ່ງຄົນໃດເວົ້າວ່າ ຍ້ອນພຣະເຈົ້າຢູ່ກັບພວກເຂົາ, ຊາຕານຈຶ່ງຈະບໍ່ເຂົ້າມາໃກ້ພວກເຂົາຢ່າງແນ່ນອນ, ສິ່ງນີ້ກໍບໍ່ຖືກຕ້ອງທັງໝົດ; ຖ້າມັນເປັນແບບນັ້ນ, ມັນຈະອະທິບາຍກ່ຽວກັບຕອນທີ່ພຣະເຢຊູຜະເຊີນກັບການທົດລອງຫຼັງຈາກທີ່ພຣະອົງໄດ້ອົດອາຫານໃນຖິ່ນກັນດານເປັນເວລາສີ່ສິບມື້ໄດ້ແນວໃດ? ສະນັ້ນຖ້າຜູ້ຄົນແກ້ໄຂມຸມມອງຂອງພວກເຂົາກ່ຽວກັບຄວາມເຊື່ອໃນພຣະເຈົ້າຢ່າງແທ້ຈິງ, ພວກເຂົາກໍຈະເຫັນຫຼາຍສິ່ງຊັດເຈນຫຼາຍຍິ່ງຂຶ້ນ ແລະ ຄວາມເຂົ້າໃຈຂອງພວກເຂົາກໍຈະບໍ່ຖືກບິດເບືອນ ແລະ ຜິດພາດ. ຖ້າຄົນໃດຄົນໜຶ່ງຕັ້ງໃຈຢ່າງແທ້ຈິງທີ່ຈະໃຫ້ພຣະເຈົ້າເຮັດໃຫ້ສົມບູນແບບ, ພວກເຂົາກໍ່ຕ້ອງເຂົ້າຫາທຸກບັນຫາທີ່ພວກເຂົາກຳລັງຜະເຊີນຢູ່ຈາກຫຼາຍໆມຸມທີ່ແຕກຕ່າງກັນ ໂດຍບໍ່ໄກວໄປທາງຊ້າຍ ຫຼື ທາງຂວາ. ຖ້າເຈົ້າບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ, ເຈົ້າກໍຍັງບໍ່ຮູ້ຈັກວິທີການຮ່ວມມືກັບພຣະເຈົ້າ. ຖ້າເຈົ້າບໍ່ຮູ້ຈັກຫຼັກການແຫ່ງພາລະກິດຂອງພຣະເຈົ້າ ແລະ ບໍ່ຮັບຮູ້ເຖິງວິທີທີ່ຊາຕານປະຕິບັດພາລະກິດໃນມະນຸດ, ເຈົ້າກໍຈະບໍ່ມີເສັ້ນທາງໃຫ້ປະຕິບັດ. ການສະແຫວງຫາຢ່າງກະຕືລືລົ້ນພຽງຢ່າງດຽວບໍ່ໄດ້ເຮັດໃຫ້ເຈົ້າບັນລຸຜົນຕາມທີ່ພຣະເຈົ້າຕ້ອງການ. ວິທີການຮັບປະສົບການດັ່ງກ່າວກໍເໝືອນກັບການຮັບປະສົບການຂອງລໍເຣັນ ນັ້ນກໍຄື: ບໍ່ໄດ້ສ້າງຄວາມແຕກຕ່າງກັນຢ່າງໃດເລີຍ ແລະ ພຽງແຕ່ໃສ່ໃຈກັບປະສົບການຢ່າງດຽວ ໂດຍບໍ່ຮັບຮູ້ວ່າ ພາລະກິດຂອງຊາຕານແມ່ນຫຍັງ, ພາລະກິດຂອງພຣະວິນຍານບໍລິສຸດແມ່ນຫຍັງ, ມະນຸດຈະຢູ່ໃນສະພາວະຫຍັງຖ້າບໍ່ມີການສະຖິດຂອງພຣະເຈົ້າ ແລະ ພຣະເຈົ້າຕ້ອງການເຮັດໃຫ້ຄົນປະເພດໃດສົມບູນແບບ. ຄວນນຳໃຊ້ຫຼັກການໃດເມື່ອຮັບມືກັບຄົນຫຼາຍປະເພດ, ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າໃນປັດຈຸບັນໄດ້ແນວໃດ, ຈະຮູ້ຈັກເຖິງອຸປະນິໄສຂອງພຣະເຈົ້າໄດ້ແນວໃດ ແລະ ຄວາມເມດຕາ, ຄວາມສະຫງ່າງາມ ແລະ ຄວາມຊອບທຳຂອງພຣະເຈົ້າຈະຖືກຊີ້ນຳກັບຄົນແນວໃດ, ໃນສະຖານະການແບບໃດ ແລະ ຍຸກໃດ, ເພິ່ນບໍ່ມີການສັງເກດໃນຄຳຖາມເຫຼົ່ານີ້ເລີຍ. ຖ້າຜູ້ຄົນບໍ່ມີນິມິດຫຼາຍຢ່າງເປັນພື້ນຖານສຳລັບປະສົບການຂອງພວກເຂົາ ແລ້ວຊີວິດກໍບໍ່ຕ້ອງຖາມເຖິງເລີຍ ແລະ

ປະສົບການກໍແຮງໄກ; ພວກເຂົາສາມາດສືບຕໍ່ຍອມ ແລະ ອົດທົນກັບທຸກສິ່ງຢ່າງໂງ່ຈ້າ. ຄົນປະເພດດັ່ງກ່າວແມ່ນຍາກທີ່ຈະເຮັດໃຫ້ສົມບູນແບບໄດ້. ສາມາດເວົ້າໄດ້ວ່າ ຖ້າເຈົ້າບໍ່ມີນິມິດຫຍັງເລີຍທີ່ເວົ້າມາຂ້າງເທິງ, ສິ່ງນີ້ກໍເປັນເຄື່ອງພິສູດທີ່ພຽງພໍແລ້ວວ່າ ເຈົ້າເປັນຄົນໂງ່, ເຈົ້າເປັນເໝືອນກັບເສົາເກືອທີ່ຕັ້ງຢູ່ໃນອິດສະຣາເອັນຢູ່ສະເໝີ. ຄົນປະເພດດັ່ງກ່າວແມ່ນໃຊ້ການບໍ່ໄດ້, ບໍ່ມີຫຍັງດີເລີຍ! ບາງຄົນຫຼັບຕາຍອມຕາມຢ່າງດຽວ, ພວກເຂົາຮູ້ຈັກຕົນເອງຢູ່ສະເໝີ ແລະ ນຳໃຊ້ວິທີການປະພຶດຂອງຕົນເອງເມື່ອຮັບມືກັບບັນຫາໃໝ່ໆ ຫຼື ພວກເຂົານຳໃຊ້ “ສະຕິປັນຍາ” ເພື່ອຮັບມືກັບບັນຫາທີ່ເລັກໆນ້ອຍໆ ເຊິ່ງບໍ່ສົມຄວນທີ່ຈະກ່າວເຖິງດ້ວຍຊໍ້າ. ຄົນປະເພດດັ່ງກ່າວແມ່ນປາສະຈາກການສັງເກດ ແລະ ມັນຄືກັບວ່າຖ້າທຳມະຊາດຂອງພວກເຂົາຄືການຍອມຮັບໃຫ້ຖືກກັ່ນແກ້ງ ແລະ ພວກເຂົາກໍເປັນເໝືອນເດີມຢູ່ສະເໝີ. ພວກເຂົາກໍຈະບໍ່ປ່ຽນແປງຈັກເທື່ອ. ຄົນແບບນີ້ເປັນຄົນໂງ່ທີ່ປາສະຈາກການສັງເກດແມ່ນແຕ່ໜ້ອຍດຽວ. ພວກເຂົາບໍ່ພະຍາຍາມດຳເນີນມາດຕະການທີ່ເໝາະສົມກັບສະຖານະການຕ່າງໆ ຫຼື ກັບຄົນທີ່ແຕກຕ່າງກັນຈັກເທື່ອ. ເຮົາໄດ້ເຫັນບາງຄົນຜູກມັດກັບຄວາມຮູ້ຂອງພວກເຂົາທີ່ກ່ຽວກັບຕົວພວກເຂົາເອງຫຼາຍ ເຖິງກັບວ່າເມື່ອຜະເຊີນໜ້າກັບຄົນທີ່ຄອບງຳດ້ວຍພາລະກິດຂອງວິນຍານຊົ່ວຮ້າຍ, ພວກເຂົາກໍກົ້ມຫົວຂອງພວກເຂົາລົງ ແລະ ສາລະພາບບາບຂອງພວກເຂົາ ໂດຍບໍ່ກ້າຢືນຂຶ້ນ ແລະ ກ່າວໂທດຄົນເຫຼົ່ານັ້ນ. ແລ້ວເມື່ອຜະເຊີນກັບພາລະກິດທີ່ເຫັນໄດ້ງ່າຍຂອງພຣະວິນຍານບໍລິສຸດ, ພວກເຂົາກໍບໍ່ກ້າທີ່ຈະເຊື່ອຟັງ. ພວກເຂົາເຊື່ອວ່າ ວິນຍານຊົ່ວຮ້າຍຢູ່ໃນກຳມືຂອງພຣະເຈົ້າເຊັ່ນດຽວກັນ ແລະ ບໍ່ມີຄວາມກ້າຫານແມ່ນແຕ່ໜ້ອຍດຽວທີ່ຈະຢືນຂຶ້ນ ແລະ ຕໍ່ຕ້ານພວກມັນ. ຄົນດັ່ງກ່າວນຳຄວາມອັບອາຍມາສູ່ພຣະເຈົ້າ ແລະ ບໍ່ສາມາດແບກຮັບພາລະກິດທີ່ໜັກໜ່ວງໃຫ້ກັບພຣະເຈົ້າແທ້ໆ. ຄົນໂງ່ປະເພດນີ້ບໍ່ໄດ້ສ້າງຄວາມແຕກຕ່າງແຕ່ຢ່າງໃດເລີຍ. ສະນັ້ນ ວິທີການຮັບປະສົບການດັ່ງກ່າວຄວນຖືກກຳຈັດ ຍ້ອນມັນບໍ່ສາມາດປ້ອງກັນໄວ້ໄດ້ໃນສາຍຕາຂອງພຣະເຈົ້າ.

ແນ່ນອນ ພຣະເຈົ້າປະຕິບັດພາລະກິດຫຼາຍຢ່າງໃນຜູ້ຄົນ, ບາງເທື່ອກໍທົດລອງພວກເຂົາ, ບາງເທື່ອກໍສ້າງສະພາບແວດລ້ອມເພື່ອເຮັດໃຫ້ພວກເຂົາເຂັ້ມແຂງ ແລະ ບາງເທື່ອກໍກ່າວພຣະທຳເພື່ອນຳພາພວກເຂົາ ແລະ ແກ້ໄຂຂໍ້ບົກຜ່ອງຂອງພວກເຂົາ. ບາງເທື່ອ ພຣະວິນຍານບໍລິສຸດກໍຊີ້ນຳຜູ້ຄົນໄປສູ່ສະພາບແວດລ້ອມທີ່ພຣະເຈົ້າໄດ້ຈັດກຽມໄວ້ໃຫ້ກັບພວກເຂົາເພື່ອຄົ້ນຫາຫຼາຍສິ່ງຫຼາຍຢ່າງທີ່ພວກເຂົາຍັງຂາດຢ່າງບໍ່ຮູ້ຕົວ. ຜ່ານສິ່ງທີ່ຜູ້ຄົນເວົ້າ ແລະ ກະທຳ ແລະ ວິທີທາງທີ່ຜູ້ຄົນປະຕິບັດຕໍ່ຄົນອື່ນ ແລະ ຮັບມືກັບສິ່ງຕ່າງໆ ໂດຍທີ່ພວກເຂົາບໍ່ຮູ້ຈັກເລີຍ, ພຣະວິນຍານບໍລິສຸດກໍສ່ອງແສງສະຫວ່າງໃຫ້ພວກເຂົາກ່ຽວກັບຫຼາຍສິ່ງທີ່ພວກເຂົາຍັງບໍ່ເຂົ້າໃຈມາກ່ອນ, ເຮັດໃຫ້ພວກເຂົາເບິ່ງເຫັນຫຼາຍສິ່ງ ແລະ ຫຼາຍຄົນຢ່າງຊັດເຈນຍິ່ງຂຶ້ນ, ເຮັດໃຫ້ພວກເຂົາເບິ່ງເຫັນເຖິງຫຼາຍຢ່າງທີ່ພວກເຂົາບໍ່ຮັບຮູ້ມາກ່ອນ. ເມື່ອເຈົ້າມີສ່ວນຮ່ວມກັບໂລກ, ເຈົ້າກໍເລີ່ມສັງເກດເຫັນສິ່ງຕ່າງໆກ່ຽວກັບໂລກເທື່ອລະໜ້ອຍ ແລະ ກ່ອນທີ່ເຈົ້າຈະພົບກັບເວລາສຸດທ້າຍ, ເຈົ້າອາດສະຫຼຸບວ່າ: “ການເປັນຄົນນັ້ນຍາກແທ້ໆ”. ຖ້າເຈົ້າໃຊ້ບາງເວລາເພື່ອຮັບປະສົບການຕໍ່ໜ້າພຣະເຈົ້າ ແລະ ຮຽນຮູ້ທີ່ຈະເຂົ້າໃຈເຖິງພາລະກິດຂອງພຣະເຈົ້າ ແລະ ອຸປະນິໄສຂອງພຣະອົງ, ເຈົ້າກໍຈະໄດ້ຮັບຄວາມເຂົ້າໃຈຢ່າງຫຼວງຫຼາຍໂດຍບໍ່ຮູ້ຕົວ ແລະ ວຸດທິ

ພາວະຂອງເຈົ້າກໍຈະເຕີບໃຫຍ່ຂຶ້ນເທື່ອລະໜ້ອຍ. ເຈົ້າຈະເຂົ້າໃຈຫຼາຍສິ່ງທີ່ເປັນຝ່າຍວິນຍານຫຼາຍຍິ່ງຂຶ້ນ ແລະ ເຈົ້າຈະຊັດເຈນຂຶ້ນກ່ຽວກັບພາລະກິດຂອງພຣະເຈົ້າໂດຍສະເພາະຢ່າງຍິ່ງ. ເຈົ້າຈະຍອມຮັບເອົາພຣະທຳຂອງພຣະເຈົ້າ, ພາລະກິດຂອງພຣະເຈົ້າ, ການກະທຳທຸກຢ່າງຂອງພຣະເຈົ້າ ແລະ ສິ່ງທີ່ພຣະເຈົ້າເປັນ ແລະ ມີນັ້ນ ໃຫ້ເປັນຊີວິດຂອງເຈົ້າເອງ. ຖ້າທຸກສິ່ງທີ່ເຈົ້າເຮັດຄືການພະເນຈອນໃນໂລກ, ປີກຂອງເຈົ້າກໍຈະຍິ່ງແຂງແຮງຂຶ້ນ ແລະ ເຈົ້າກໍຈະຕໍ່ຕ້ານພຣະເຈົ້າຫຼາຍຍິ່ງຂຶ້ນ; ພຣະເຈົ້າກໍຈະຍິ່ງໃຫຍ່ຂຶ້ນ; ແລ້ວພຣະເຈົ້າຈະສາມາດໃຊ້ເຈົ້າໄດ້ແນວໃດ? ເພາະມີຄຳເວົ້າທີ່ວ່າ "ໃນຄວາມຄິດເຫັນຂອງຂ້ານ້ອຍແລ້ວ" ຫຼາຍເກີນໄປໃນຕົວເຈົ້າ, ພຣະເຈົ້າຈຶ່ງບໍ່ໃຊ້ເຈົ້າ. ຍິ່ງເຈົ້າຢູ່ໃນການສະຖິດຂອງພຣະເຈົ້າຫຼາຍສໍ່າໃດ, ເຈົ້າກໍຈະມີປະສົບການຫຼາຍສໍ່ານັ້ນ. ຖ້າເຈົ້າຍັງດຳລົງຊີວິດຢູ່ໃນໂລກເໝືອນກັບສັດ ໂດຍປາກຂອງເຈົ້າປະກາດວ່າເຊື່ອໃນພຣະເຈົ້າ ແຕ່ຫົວໃຈຂອງເຈົ້າແມ່ນຢູ່ບ່ອນອື່ນ ແລະ ຖ້າເຈົ້າຍັງສຶກສາປັດຊະຍາໃນການດຳລົງຊີວິດໃນໂລກ, ແລ້ວສິ່ງທີ່ເຈົ້າກະທຳດ້ວຍຄວາມຍາກລຳບາກທີ່ຜ່ານມາຈະບໍ່ມີປະໂຫຍດຫຍັງເລີຍບໍ? ສະນັ້ນ, ຍິ່ງຜູ້ຄົນຢູ່ໃນການສະຖິດຂອງພຣະເຈົ້າຫຼາຍສໍ່າໃດ, ພຣະເຈົ້າກໍຈະເຮັດໃຫ້ພວກເຂົາສົມບູນແບບງ່າຍຂຶ້ນສໍ່ານັ້ນ. ນີ້ແມ່ນເສັ້ນທາງທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດຂອງພຣະອົງ. ຖ້າເຈົ້າບໍ່ເຂົ້າໃຈເຖິງສິ່ງນີ້, ມັນກໍເປັນໄປບໍ່ໄດ້ສຳລັບເຈົ້າທີ່ຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ ແລະ ການທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບກໍບໍ່ຕ້ອງຖາມເຖິງເລີຍ. ເຈົ້າຈະບໍ່ສາມາດມີຊີວິດຝ່າຍວິນຍານທີ່ປົກກະຕິ; ມັນຈະຄືກັບວ່າ ເຈົ້າພິການ ແລະ ເຈົ້າຈະມີພຽງແຕ່ພາລະກິດທີ່ຍາກລຳບາກຂອງເຈົ້າເອງເທົ່ານັ້ນ ແລະ ບໍ່ມີພາລະກິດຂອງພຣະເຈົ້າເລີຍ. ນີ້ບໍ່ແມ່ນຂໍ້ຜິດພາດໃນການຮັບປະສົບການຂອງເຈົ້າບໍ? ເຈົ້າບໍ່ຈຳເປັນຕ້ອງອະທິຖານເພື່ອໃຫ້ຢູ່ໃນການສະຖິດຂອງພຣະເຈົ້າ; ບາງເທື່ອ ມັນກໍຢູ່ໃນການທີ່ເຈົ້າຕຶກຕອງເຖິງພຣະເຈົ້າ ຫຼື ການໄຕ່ຕອງເຖິງພາລະກິດຂອງພຣະເຈົ້າ, ບາງເທື່ອກໍຢູ່ໃນການທີ່ເຈົ້າຮັບມືກັບບັນຫາບາງຢ່າງ ແລະ ບາງເທື່ອກໍຜ່ານການທີ່ເຈົ້າຖືກເປີດເຜີຍໃນເຫດການໃດໜຶ່ງ ທີ່ເຮັດໃຫ້ເຈົ້າເຂົ້າມາຢູ່ໃນການສະຖິດຂອງພຣະເຈົ້າ. ຫຼາຍຄົນເວົ້າວ່າ "ຂ້ານ້ອຍບໍ່ໄດ້ຢູ່ໃນການຊົງສະຖິດຂອງພຣະເຈົ້າບໍ ເພາະຂ້ານ້ອຍອະທິຖານຢູ່ເລື້ອຍໆ?" ຫຼາຍຄົນອະທິຖານຢ່າງບໍ່ສິ້ນສຸດ "ໃນການສະຖິດຂອງພຣະເຈົ້າ". ເຖິງແມ່ນວ່າຄຳອະທິຖານອາດຈະຢູ່ໃນປາກຂອງພວກເຂົາຕະຫຼອດເວລາ, ພວກເຂົາບໍ່ໄດ້ດຳລົງຊີວິດຢູ່ໃນການສະຖິດຂອງພຣະເຈົ້າຢ່າງແທ້ຈິງ. ນີ້ເປັນພຽງວິທີດຽວທີ່ຜູ້ຄົນປະເພດດັ່ງກ່າວຈະສາມາດຮັກສາສະພາບຂອງພວກເຂົາໃນການສະຖິດຂອງພຣະເຈົ້າໄດ້; ພວກເຂົາບໍ່ສາມາດນຳໃຊ້ຫົວໃຈຂອງພວກເຂົາເພື່ອມີສ່ວນຮ່ວມກັບພຣະເຈົ້າໄດ້ຕະຫຼອດເວລາ ແລະ ພວກເຂົາບໍ່ສາມາດມາຢູ່ຕໍ່ໜ້າພຣະເຈົ້າໂດຍວິທີການຮັບປະສົບການ, ບໍ່ວ່າຈະເປັນການໄຕ່ຕອງ, ການຕຶກຕອງຢ່າງຽບໆ ຫຼື ການໃຊ້ຈິດໃຈຂອງພວກເຂົາເພື່ອມີສ່ວນຮ່ວມກັບພຣະເຈົ້າທີ່ຢູ່ພາຍໃນຫົວໃຈຂອງພວກເຂົາ ໂດຍສຳນຶກເຖິງພາລະຂອງພຣະເຈົ້າ. ພວກເຂົາພຽງແຕ່ຖວາຍຄຳອະທິຖານເຖິງພຣະເຈົ້າທີ່ຢູ່ໃນສະຫວັນດ້ວຍປາກຂອງພວກເຂົາ. ຫຼາຍຄົນບໍ່ມີພຣະເຈົ້າຢູ່ໃນຫົວໃຈ ແລະ ພຣະເຈົ້າມີແຕ່ຢູ່ທີ່ນັ້ນເມື່ອພວກເຂົາເຂົ້າມາໃກ້ພຣະອົງ; ສ່ວນຫຼາຍແລ້ວ ພຣະເຈົ້າບໍ່ໄດ້ຢູ່ທີ່ນັ້ນເລີຍ. ນີ້ບໍ່ແມ່ນການສະແດງອອກເຖິງການບໍ່ມີພຣະເຈົ້າໃນຫົວໃຈຂອງຄົນໆໜຶ່ງບໍ? ຖ້າພວກເຂົາມີພຣະເຈົ້າໃນຫົວໃຈຂອງ

ພວກເຂົາແທ້ໆ, ພວກເຂົາຈະສາມາດເຮັດໃນສິ່ງທີ່ໂຈນ ແລະ ສັດເຮັດໄດ້ບໍ? ຖ້າຄົນໜຶ່ງເຄົາລົບພຣະເຈົ້າຢ່າງແທ້ຈິງ ພວກເຂົາຈະນໍາຫົວໃຈທີ່ແທ້ຈິງມາສໍາຜັດກັບພຣະເຈົ້າ ແລ້ວຄວາມຄິດ ແລະ ແນວຄິດຂອງພວກເຂົາກໍຈະມີພຣະທໍາຂອງພຣະເຈົ້າຢູ່ສະເໝີ. ພວກເຂົາຈະບໍ່ເຮັດຂໍ້ຜິດພາດໃນທັງຄໍາເວົ້າ ຫຼື ການກະທໍາ ແລະ ຈະບໍ່ເຮັດຫຍັງກໍຕາມທີ່ຕໍ່ຕ້ານພຣະເຈົ້າຢ່າງແນ່ນອນ. ສິ່ງດັ່ງກ່າວແມ່ນມາດຕະຖານຂອງການເປັນຜູ້ເຊື່ອ.

# ພຣະບັນຍັດແຫ່ງຍຸກໃໝ່

ໃນການຜະເຊີນພາລະກິດຂອງພຣະເຈົ້າ, ພວກເຈົ້າຕ້ອງອ່ານພຣະທຳຂອງພຣະເຈົ້າຢ່າງລະມັດລະວັງ ແລະ ປະກອບຕົນເອງດ້ວຍຄວາມຈິງ. ແຕ່ບໍ່ວ່າພວກເຈົ້າຕ້ອງການເຮັດຫຍັງ ຫຼື ພວກເຈົ້າຕ້ອງການເຮັດມັນແນວໃດກໍຕາມ, ບໍ່ຈຳເປັນສຳລັບຄຳອະທິຖານ ຫຼື ຄຳອ້ອນວອນຢ່າງຈິງຈັງຂອງພວກເຈົ້າ ແລະ ແນ່ນອນ ສິ່ງເຫຼົ່ານີ້ບໍ່ມີປະໂຫຍດໃດໆ. ແຕ່ໃນປັດຈຸບັນ, ບັນຫາທີ່ກຳລັງຢູ່ຕໍ່ໜ້າພວກເຈົ້າກໍຄືພວກເຈົ້າບໍ່ຮູ້ວິທີການຜະເຊີນພາລະກິດຂອງພຣະເຈົ້າ ແລະ ມີຄວາມຂີ້ຄ້ານຫຼາຍຢ່າງໃນຕົວພວກເຈົ້າ. ພວກເຈົ້າຮູ້ຈັກຄຳສັ່ງສອນ, ແຕ່ພວກເຈົ້າບໍ່ມີຄວາມເປັນຈິງຫຼາຍ. ນີ້ບໍ່ແມ່ນສັນຍານບົ່ງບອກເຖິງຄວາມເຂົ້າໃຈຜິດບໍ? ຄວາມບໍ່ຖືກຕ້ອງຫຼາຍຢ່າງແມ່ນປາກົດອອກຢ່າງຊັດເຈນຢູ່ໃນພວກເຈົ້າກຸ່ມນີ້. ໃນປັດຈຸບັນ, ພວກເຈົ້າບໍ່ສາມາດບັນລຸການທົດລອງດັ່ງກ່າວໃນຖານະທີ່ເປັນ "ຜູ້ບໍລິການ" ແລະພວກເຈົ້າບໍ່ສາມາດຈິນຕະນາການ ຫຼື ສຳເລັດການທົດລອງອື່ນໆ ແລະ ການຫຼໍ່ຫຼອມທີ່ກ່ຽວຂ້ອງກັບພຣະທຳຂອງພຣະເຈົ້າ. ພວກເຈົ້າຕ້ອງຍຶດໝັ້ນຕໍ່ຫຼາຍສິ່ງທີ່ພວກເຈົ້າຄວນນຳໄປປະຕິບັດ. ໝາຍຄວາມວ່າ ຜູ້ຄົນຕ້ອງຍຶດໝັ້ນຕໍ່ຫຼາຍໜ້າທີ່ ທີ່ພວກເຂົາຄວນປະຕິບັດ. ນີ້ຄືສິ່ງທີ່ຜູ້ຄົນຄວນຍຶດໝັ້ນ ແລະ ນີ້ຄືສິ່ງທີ່ພວກເຂົາຕ້ອງປະຕິບັດ. ຈົ່ງປ່ອຍໃຫ້ພຣະວິນຍານບໍລິສຸດເຮັດໃນສິ່ງທີ່ພຣະວິນຍານບໍລິສຸດຕ້ອງເຮັດ; ມະນຸດບໍ່ສາມາດມີບົດບາດໃນສິ່ງດັ່ງກ່າວ. ມະນຸດຄວນຍຶດໝັ້ນໃນສິ່ງທີ່ມະນຸດຄວນເຮັດ ເຊິ່ງບໍ່ມີສ່ວນກ່ຽວຂ້ອງກັບພຣະວິນຍານບໍລິສຸດ. ມັນບໍ່ແມ່ນຫຍັງເລີຍ ນອກຈາກເປັນສິ່ງທີ່ມະນຸດຄວນເຮັດ ແລະ ຄວນຍຶດໝັ້ນດັ່ງພຣະບັນຍັດ, ຄືກັນກັບການຍຶດໝັ້ນຕາມພຣະບັນຍັດໃນພັນທະສັນຍາເດີມ. ເຖິງປັດຈຸບັນຈະບໍ່ແມ່ນຍຸກແຫ່ງພຣະບັນຍັດ ແຕ່ກໍຍັງມີພຣະທຳຫຼາຍຂໍ້ທີ່ຄວນຍຶດໝັ້ນ ເຊິ່ງຢູ່ໃນຮູບແບບດຽວກັບພຣະທຳໃນຍຸກແຫ່ງພຣະບັນຍັດ. ພຣະທຳເຫຼົ່ານີ້ບໍ່ໄດ້ຖືກດຳເນີນພຽງແຕ່ອາໄສການສຳຜັດຂອງພຣະວິນຍານບໍລິສຸດເທົ່ານັ້ນ, ແຕ່ກົງກັນຂ້າມ ພວກມັນແມ່ນສິ່ງທີ່ມະນຸດຄວນຍຶດໝັ້ນ. ຕົວຢ່າງ:

ເຈົ້າຈະບໍ່ຕັດສິນພາລະກິດຂອງພຣະເຈົ້າທີ່ແທ້ຈິງ.

ເຈົ້າຈະບໍ່ຕໍ່ຕ້ານມະນຸດ ຜູ້ທີ່ພຣະເຈົ້າເປັນພະຍານໃຫ້.

ຕໍ່ໜ້າພຣະເຈົ້າ, ເຈົ້າຈະຮັກສາຕຳແໜ່ງຂອງເຈົ້າ ແລະ ຈະບໍ່ເຮັດຜິດສິນທຳ.

ຖ້ອຍຄຳຂອງເຈົ້າຄວນມີຄວາມເໝາະສົມ ແລະ ຄຳເວົ້າ ແລະ ການກະທຳຂອງເຈົ້າຕ້ອງປະຕິບັດຕາມການຈັດແຈງຂອງມະນຸດທີ່ພຣະເຈົ້າໄດ້ເປັນພະຍານໃຫ້.

ເຈົ້າຄວນເຄົາລົບພະຍານຂອງພຣະເຈົ້າ. ເຈົ້າຈະບໍ່ເມີນເສີຍຕໍ່ພາລະກິດຂອງພຣະເຈົ້າ ແລະພຣະທຳທີ່ອອກຈາກປາກຂອງພຣະອົງ.

ເຈົ້າຈະບໍ່ຮຽນແບບນ້ຳສຽງ ແລະ ຈຸດປະສົງຂອງພຣະຄຳຂອງພຣະເຈົ້າ.

ສ່ວນດ້ານພາຍນອກ, ເຈົ້າຈະບໍ່ເຮັດໃນສິ່ງທີ່ເປັນການຕໍ່ຕ້ານຕໍ່ມະນຸດ ຜູ້ທີ່ພຣະເຈົ້າເປັນພະຍານໃຫ້ຢ່າງເປີດເຜີຍ ແລະ ອື່ນໆອີກ.

ແຕ່ລະຄົນຄວນຍຶດໝັ້ນຕໍ່ສິ່ງເຫຼົ່ານີ້. ໃນແຕ່ລະຍຸກ, ພຣະເຈົ້າໄດ້ກຳນົດກົດລະບຽບຫຼາຍຂໍ້ທີ່ຄ້າຍຄື

ກັນກັບພຣະບັນຍັດ ແລະ ເປັນສິ່ງທີ່ມະນຸດຕ້ອງຍຶດໝັ້ນ. ດ້ວຍສິ່ງນີ້ ພຣະອົງໄດ້ຈຳກັດອຸປະນິໄສຂອງມະນຸດ ແລະ ໄດ້ກວດສອບຄວາມຈິງໃຈຂອງມະນຸດ. ໃຫ້ເອົາພຣະທຳທີ່ວ່າ "ຈົ່ງໃຫ້ກຽດພໍ່ຂອງເຈົ້າ ແລະ ແມ່ຂອງເຈົ້າ" ຂອງຍຸກແຫ່ງພັນທະສັນຍາເດີມເປັນຕົວຢ່າງ, ພຣະທຳເຫຼົ່ານີ້ໃຊ້ກັບປັດຈຸບັນບໍ່ໄດ້; ໃນເວລານັ້ນ, ພຣະທຳເຫຼົ່ານີ້ພຽງແຕ່ຈຳກັດອຸປະນິໄສພາຍນອກບາງຢ່າງຂອງມະນຸດເທົ່ານັ້ນ ເຊິ່ງພຣະທຳເຫຼົ່ານີ້ຖືກນຳໃຊ້ເພື່ອສຳແດງຄວາມຈິງໃຈໃນຄວາມເຊື່ອຂອງມະນຸດທີ່ມີຕໍ່ພຣະເຈົ້າ ແລະ ເປັນສັນຍາລັກຂອງຄົນທີ່ເຊື່ອໃນພຣະເຈົ້າ. ເຖິງວ່າດຽວນີ້ຈະແມ່ນຍຸກແຫ່ງອານາຈັກ, ແຕ່ກໍຍັງມີກົດລະບຽບຫຼາຍຂໍ້ທີ່ມະນຸດຕ້ອງຍຶດໝັ້ນ. ກົດລະບຽບໃນອະດີດແມ່ນໃຊ້ການບໍ່ໄດ້ ແລະ ໃນປັດຈຸບັນ ມີການປະຕິບັດຫຼາຍຢ່າງທີ່ເໝາະສົມສຳລັບມະນຸດຕ້ອງປະຕິບັດຕາມ ແລະ ເປັນສິ່ງທີ່ຈຳເປັນ. ສິ່ງເຫຼົ່ານີ້ບໍ່ໄດ້ມີສ່ວນກ່ຽວຂ້ອງຫຍັງກັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ມະນຸດຈະຕ້ອງເປັນຄົນເຮັດສິ່ງເຫຼົ່ານີ້.

ໃນຍຸກແຫ່ງພຣະຄຸນ, ການປະຕິບັດຫຼາຍຢ່າງໃນຍຸກແຫ່ງພຣະບັນຍັດໄດ້ຖືກປະຖິ້ມ ຍ້ອນວ່າພຣະບັນຍັດເຫຼົ່ານີ້ບໍ່ມີປະສິດທິພາບໂດຍສະເພາະສຳລັບພາລະກິດໃນເວລານັ້ນ. ຫຼັງຈາກທີ່ພວກມັນຖືກປະຖິ້ມ, ການປະຕິບັດຫຼາຍຢ່າງໄດ້ຖືກກຳນົດອອກ ເຊິ່ງແທດເໝາະກັບຍຸກສະໄໝ ແລະ ກໍໄດ້ກາຍມາເປັນກົດລະບຽບຫຼາຍຂໍ້ໃນປັດຈຸບັນ. ເມື່ອພຣະເຈົ້າແຫ່ງປັດຈຸບັນສະເດັດມາ, ກົດລະບຽບເຫຼົ່ານີ້ແມ່ນຖືກລຶບລ້າງ ແລະ ບໍ່ມີຄວາມຈຳເປັນທີ່ຈະຕ້ອງຍຶດຖືອີກຕໍ່ໄປ ແລະ ການປະຕິບັດຫຼາຍຢ່າງໄດ້ຖືກກຳນົດອອກເພື່ອໃຫ້ແທດເໝາະກັບພາລະກິດໃນປັດຈຸບັນ. ໃນປັດຈຸບັນນີ້ ການປະຕິບັດເຫຼົ່ານີ້ບໍ່ແມ່ນກົດລະບຽບ ແຕ່ກົງກັນຂ້າມ ແມ່ນເຈດຕະນາເພື່ອໃຫ້ບັນລຸຜົນ; ການປະຕິບັດເຫຼົ່ານີ້ແມ່ນແທດເໝາະກັບປັດຈຸບັນ ແລະ ໃນອະນາຄົດ ບາງເທື່ອພວກມັນກໍອາດຈະກາຍເປັນກົດລະບຽບ. ສະຫຼຸບກໍຄື ເຈົ້າຄວນຍຶດໝັ້ນໃນສິ່ງທີ່ເປັນໝາກຜົນຕໍ່ພາລະກິດໃນປັດຈຸບັນ. ບໍ່ຕ້ອງສົນໃຈກັບເລື່ອງໃນອະນາຄົດ: ສິ່ງທີ່ເຮັດໃນປັດຈຸບັນແມ່ນເພື່ອຜົນປະໂຫຍດໃນປັດຈຸບັນ. ບາງເທື່ອໃນອະນາຄົດອາດຈະມີການປະຕິບັດທີ່ດີກວ່ານີ້ທີ່ເຈົ້າຈຳເປັນຕ້ອງປະຕິບັດ ແຕ່ຈົ່ງຢ່າໃສ່ໃຈກັບສິ່ງເຫຼົ່ານັ້ນຫຼາຍເກີນໄປ. ກົງກັນຂ້າມ ຈົ່ງຍຶດໝັ້ນໃນສິ່ງທີ່ຄວນຍຶດໝັ້ນໃນປັດຈຸບັນເພື່ອຫຼີກເວັ້ນການຕໍ່ຕ້ານພຣະເຈົ້າ. ໃນປັດຈຸບັນ ບໍ່ມີສິ່ງໃດທີ່ສຳຄັນໃຫ້ມະນຸດຍຶດໝັ້ນໄປກວ່າສິ່ງຕໍ່ໄປນີ້:

ເຈົ້າຕ້ອງບໍ່ພະຍາຍາມຫຼອກລວງພຣະເຈົ້າທີ່ຢືນຢູ່ຕໍ່ໜ້າເຈົ້າ ຫຼື ປົດບັງສິ່ງໃດໜຶ່ງຈາກພຣະອົງ.

ເຈົ້າຈະບໍ່ເວົ້າໃນສິ່ງທີ່ຫຍາບຄາຍ ຫຼື ໃນສິ່ງທີ່ອວດດີຕໍ່ໜ້າພຣະເຈົ້າທີ່ຢູ່ຕໍ່ໜ້າເຈົ້າ.

ເຈົ້າຕ້ອງບໍ່ຫຼອກລວງພຣະເຈົ້າທີ່ຢູ່ຕໍ່ໜ້າເຈົ້າ ໂດຍໃຊ້ຄຳເວົ້າທີ່ອ່ອນຫວານ ແລະ ຖ້ອຍຄຳທີ່ຈົບງາມເພື່ອຮັບເອົາຄວາມໄວ້ວາງໃຈຈາກພຣະເຈົ້າ.

ເຈົ້າຈະບໍ່ກະທຳໃນສິ່ງທີ່ບໍ່ເຄົາລົບຕໍ່ໜ້າພຣະເຈົ້າ. ເຈົ້າຈະເຊື່ອຟັງໃນທຸກສິ່ງທີ່ກ່າວອອກຈາກປາກຂອງພຣະເຈົ້າ ແລະ ຈະບໍ່ຂັດຂືນ, ຕໍ່ຕ້ານ ຫຼື ໂຕ້ຖຽງພຣະທຳຂອງພຣະອົງ.

ເຈົ້າຈະບໍ່ຕີຄວາມໝາຍພຣະທຳທີ່ກ່າວຈາກປາກຂອງພຣະເຈົ້າ ຕາມທີ່ເຈົ້າຄິດວ່າເຫັນຄວນ. ເຈົ້າຄວນລະວັງລີ້ນຂອງເຈົ້າ ເພື່ອຫຼີກເວັ້ນບໍ່ໃຫ້ມັນເຮັດໃຫ້ເຈົ້າຕົກເປັນເຫຍື່ອຂອງແຜນການຫຼອກລວງຂອງຄົນຊົ່ວ.

ເຈົ້າຄວນລະວັງບາດກ້າວຂອງຕົວເຈົ້າ ເພື່ອຫຼີກເວັ້ນບໍ່ໃຫ້ລ່ວງລະເມີດຂອບເຂດທີ່ພຣະເຈົ້າກຳນົດໄວ້ໃຫ້ເຈົ້າ. ຖ້າເຈົ້າລ່ວງລະເມີດ, ນີ້ຈະເຮັດໃຫ້ເຈົ້າຢືນຢູ່ໃນຕຳແໜ່ງຂອງພຣະເຈົ້າ ແລະ ກ່າວຄຳເວົ້າທີ່ລໍ້ລວງ ແລະ ໂອ້ອວດ ແລະ ດ້ວຍເຫດນີ້ ມັນຈະເຮັດໃຫ້ພຣະເຈົ້າກຽດຊັງເຈົ້າ.

ເຈົ້າຈະບໍ່ເຜີຍແຜ່ພຣະທຳທີ່ກ່າວຈາກປາກຂອງພຣະເຈົ້າໂດຍບໍ່ລະມັດລະວັງ ເພື່ອປ້ອງກັນບໍ່ໃຫ້ຄົນອື່ນເຍາະເຍີ້ຍເຈົ້າ ແລະ ບໍ່ໃຫ້ພວກຜີຮ້າຍມາຫຼອກລວງເຈົ້າ.

ເຈົ້າຈະເຊື່ອຟັງພາລະກິດທັງໝົດຂອງພຣະເຈົ້າໃນປັດຈຸບັນ. ເຖິງວ່າເຈົ້າຈະບໍ່ເຂົ້າໃຈມັນ ແຕ່ເຈົ້າກໍຕ້ອງບໍ່ຕັດສິນມັນ; ສິ່ງທີ່ເຈົ້າສາມາດເຮັດໄດ້ແມ່ນພຽງສະແຫວງຫາ ແລະ ສົນທະນາ.

ບໍ່ມີໃຜສາມາດລ່ວງລະເມີດສະຖານທີ່ດັ່ງເດີມຂອງພຣະເຈົ້າໄດ້. ຈາກຕຳແໜ່ງຂອງມະນຸດ ເຈົ້າບໍ່ສາມາດເຮັດໃນສິ່ງໃດໄດ້ນອກຈາກຮັບໃຊ້ພຣະເຈົ້າໃນປັດຈຸບັນ. ຈາກຕຳແໜ່ງຂອງມະນຸດ ເຈົ້າບໍ່ສາມາດສອນພຣະເຈົ້າໃນປັດຈຸບັນ, ການເຮັດໃນສິ່ງດັ່ງກ່າວແມ່ນການຊັກນຳໄປໃນທາງທີ່ຜິດ.

ບໍ່ມີໃຜສາມາດຢືນຢູ່ຕຳແໜ່ງຂອງບຸກຄົນທີ່ພຣະເຈົ້າເປັນພະຍານໃຫ້; ໃນຄຳເວົ້າ, ການກະທຳ ແລະ ຄວາມຄິດໃນສ່ວນເລິກຂອງເຈົ້າ, ເຈົ້າຢືນຢູ່ໃນຕຳແໜ່ງຂອງມະນຸດ. ຕ້ອງປະຕິບັດຕາມສິ່ງດັ່ງກ່າວນີ້, ມັນເປັນຄວາມຮັບຜິດຊອບຂອງມະນຸດ ແລະ ບໍ່ມີໃຜສາມາດປ່ຽນແປງມັນໄດ້; ການພະຍາຍາມເຮັດໃນສິ່ງດັ່ງກ່າວຈະເປັນການລະເມີດກົດບັນຍັດແຫ່ງການປົກຄອງຂອງພຣະເຈົ້າ. ທຸກຄົນຄວນຈື່ຈຳສິ່ງດັ່ງກ່າວນີ້ໄວ້.

ເປັນເວລາດົນນານທີ່ພຣະເຈົ້າກ່າວ ແລະ ເວົ້າ ເພື່ອເຮັດໃຫ້ມະນຸດພິຈາລະນາວ່າການອ່ານ ແລະ ທ່ອງຈຳພຣະທຳຂອງພຣະເຈົ້າຄືໜ້າທີ່ຫຼັກຂອງເຂົາ. ບໍ່ມີໃຜໃຫ້ຄວາມສົນໃຈຕໍ່ການປະຕິບັດ ແລະ ແມ່ນແຕ່ສິ່ງທີ່ເຈົ້າຄວນປະຕິບັດຕາມ ເຈົ້າກໍຍັງບໍ່ປະຕິບັດ, ສິ່ງນີ້ໄດ້ນຳຄວາມຫຍຸ້ງຍາກ ແລະ ບັນຫາຫຼາຍຢ່າງມາສູ່ການຮັບໃຊ້ຂອງພວກເຈົ້າ. ກ່ອນທີ່ຈະມີການປະຕິບັດພຣະທຳຂອງພຣະເຈົ້າ, ຖ້າເຈົ້າບໍ່ຍຶດໝັ້ນໃນສິ່ງທີ່ເຈົ້າຄວນຍຶດໝັ້ນ, ແລ້ວເຈົ້າກໍຈະເປັນໜຶ່ງໃນບັນດາຄົນທີ່ພຣະເຈົ້າກຽດຊັງ ແລະ ປະຕິເສດ. ໃນການຍຶດໝັ້ນການປະຕິບັດເຫຼົ່ານີ້, ເຈົ້າຄວນມີຄວາມຈິງຈັງ ແລະ ຄວາມຈິງໃຈ. ເຈົ້າບໍ່ຄວນປະຕິບັດກັບສິ່ງເຫຼົ່ານີ້ຄືກັນກັບວ່າພວກມັນເປັນໂສ້ທີ່ລ່າມນັກໂທດ ແຕ່ຍຶດໝັ້ນວ່າ ສິ່ງເຫຼົ່ານີ້ຄືພຣະບັນຍັດ. ໃນປັດຈຸບັນ, ເຈົ້າບໍ່ຄວນເອົາຕົວເອງໄປພົວພັນກັບຜົນທີ່ຖືກບັນລຸ; ສະຫຼຸບກໍຄື ນີ້ແມ່ນວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ ແລະ ຜູ້ໃດກໍຕາມທີ່ກະທຳຄວາມຜິດຈະຕ້ອງຖືກລົງໂທດ. ພຣະວິນຍານບໍລິສຸດບໍ່ມີຄວາມຮູ້ສຶກ ແລະ ບໍ່ສົນໃຈກັບຄວາມເຂົ້າໃຈໃນປັດຈຸບັນຂອງເຈົ້າ. ຖ້າເຈົ້າໄດ້ລ່ວງເກີນພຣະເຈົ້າໃນມື້ນີ້, ພຣະອົງກໍຈະລົງໂທດເຈົ້າ. ຖ້າເຈົ້າລ່ວງເກີນພຣະອົງພາຍໃນຂອບເຂດອຳນາດຂອງພຣະອົງ, ພຣະອົງກໍຈະບໍ່ລະເວັ້ນເຈົ້າ. ພຣະອົງບໍ່ສົນໃຈວ່າເຈົ້າຈະຈິງຈັງໃນການທີ່ຍຶດໝັ້ນຕໍ່ພຣະທຳຂອງພຣະເຢຊູໜ້ອຍຫຼາຍສໍ່າໃດ. ຖ້າເຈົ້າລະເມີດພຣະບັນຍັດຂອງພຣະເຈົ້າໃນມື້ນີ້, ພຣະອົງກໍຈະລົງໂທດເຈົ້າ ແລະ ປະນາມເຈົ້າຈົນຕາຍ. ການທີ່ເຈົ້າບໍ່ຍຶດໝັ້ນສິ່ງເຫຼົ່ານັ້ນຈະສາມາດເປັນສິ່ງທີ່ຍອມຮັບໄດ້ແນວໃດ? ເຈົ້າຈະຕ້ອງຍຶດໝັ້ນ ເຖິງແມ່ນວ່າຈະຕ້ອງພົບກັບຄວາມເຈັບປວດໜ້ອຍໜຶ່ງກໍຕາມ! ບໍ່ວ່າມັນຈະແມ່ນສາສະໜາ, ພາກສ່ວນ, ປະເທດ ຫຼື ນິກາຍໃດກໍຕາມ, ໃນອະນາຄົດ ພວກເຂົາ

ທຸກຄົນຕ້ອງຍຶດໝັ້ນຕໍ່ການປະຕິບັດເຫຼົ່ານີ້. ບໍ່ມີໃຜຖືກຍົກເວັ້ນ ແລະ ບໍ່ມີໃຜຈະຖືກລະເວັ້ນ! ເນື່ອງຈາກວ່າສິ່ງເຫຼົ່ານີ້ແມ່ນສິ່ງທີ່ພຣະວິນຍານບໍລິສຸດຈະເຮັດໃນມື້ນີ້ ແລະ ບໍ່ມີຜູ້ໃດສາມາດລ່ວງເກີນສິ່ງເຫຼົ່ານີ້ໄດ້. ເຖິງວ່າສິ່ງເຫຼົ່ານີ້ຈະບໍ່ແມ່ນສິ່ງທີ່ຍິ່ງໃຫຍ່, ແຕ່ສິ່ງເຫຼົ່ານີ້ແມ່ນສິ່ງທີ່ທຸກຄົນຕ້ອງເຮັດ ແລະພວກມັນຄືພຣະບັນຍັດທີ່ໄດ້ຖືກກຳນົດໃຫ້ກັບມະນຸດໂດຍພຣະເຢຊູ ຜູ້ທີ່ຟື້ນຄືນຊີບ ແລະ ໄດ້ຂຶ້ນສະຫວັນ. ໜັງສື "ເສັ້ນທາງ... (7)" ບໍ່ໄດ້ກ່າວໄວ້ບໍ່ວ່າ ນິຍາມຂອງພຣະເຢຊູກ່ຽວກັບວ່າ ພວກເຈົ້າຊອບທຳ ຫຼື ບາບ ຫຼື ບໍ່ນັ້ນແມ່ນຂຶ້ນກັບທ່າທີຂອງເຈົ້າທີ່ມີຕໍ່ພຣະເຈົ້າໃນປັດຈຸບັນ? ບໍ່ມີໃຜຄວນເບິ່ງຂ້າມຈຸດນີ້. ໃນຍຸກແຫ່ງພຣະບັນຍັດ, ຊາວຟາຣິຊາຍຮຸ່ນຕໍ່ຮຸ່ນໄດ້ເຊື່ອໃນພຣະເຈົ້າ ແຕ່ເມື່ອຍຸກແຫ່ງພຣະຄຸນໄດ້ມາເຖິງ ພວກເຂົາກໍບໍ່ຮູ້ຈັກພຣະເຢຊູ ແລະ ໄດ້ຕໍ່ຕ້ານພຣະອົງ. ສະນັ້ນ, ທຸກສິ່ງທີ່ພວກເຂົາເຮັດກໍບໍ່ມີຜົນ ແລະ ບໍ່ມີປະໂຫຍດຍັງເລີຍ ແລະ ພຣະເຈົ້າກໍບໍ່ໄດ້ຮັບເອົາການກະທຳຂອງພວກເຂົາ. ຖ້າເຈົ້າສາມາດເບິ່ງເຫັນສິ່ງນີ້ໄດ້ ເຈົ້າກໍຈະບໍ່ເຮັດບາບຢ່າງງ່າຍດາຍ. ບາງເທື່ອ ຫຼາຍຄົນໄດ້ປະເມີນຕົວເອງໂດຍການສົມທຽບກັບພຣະເຈົ້າ. ການຕໍ່ຕ້ານພຣະເຈົ້າມີລົດຊາດແບບໃດ? ມັນຂົມ ຫຼື ຫວານບໍ? ເຈົ້າຄວນເຂົ້າໃຈໃນສິ່ງນີ້. ຢ່າເຮັດຄືວ່າເຈົ້າບໍ່ຮູ້ຫຍັງເລີຍ. ໃນຫົວໃຈຂອງພວກເຂົາ, ບາງເທື່ອ ບາງຄົນອາດຈະຍັງບໍ່ເຊື່ອເທື່ອ. ແຕ່ເຮົາຂໍແນະນຳໃຫ້ເຈົ້າທົດລອງສິ່ງດັ່ງກ່າວນີ້ ແລະ ເບິ່ງ, ເບິ່ງວ່າມັນມີລົດຊາດແບບໃດ. ນີ້ຈະປ້ອງກັນບໍ່ໃຫ້ຫຼາຍຄົນມີຂໍ້ສົງໄສກ່ຽວກັບມັນອີກ. ຫຼາຍຄົນໄດ້ອ່ານພຣະທຳຂອງພຣະເຈົ້າ ແຕ່ກໍຍັງຕໍ່ຕ້ານພຣະອົງແບບລັບໆໃນຫົວໃຈຂອງພວກເຂົາ. ພາຍຫຼັງທີ່ໄດ້ຕໍ່ຕ້ານພຣະອົງແບບນີ້, ເຈົ້າບໍ່ຮູ້ສຶກຄືກັບວ່າມີມີດມາແທງຫົວໃຈຂອງເຈົ້າບໍ? ຖ້າບໍ່ແມ່ນຍ້ອນຄອບຄົວຂາດຄວາມປອງດອງກັນ, ມັນກໍແມ່ນຄວາມບໍ່ສະບາຍທາງດ້ານຮ່າງກາຍ ຫຼື ຄວາມທຸກທໍລະມານຂອງລູກຊາຍ ແລະ ລູກສາວ. ເຖິງວ່າເນື້ອໜັງຂອງເຈົ້າຈະຖືກລະເວັ້ນຈາກຄວາມຕາຍ ແຕ່ມືຂອງພຣະເຈົ້າກໍຈະບໍ່ປ່ອຍເຈົ້າໄປຈັກເທື່ອ. ເຈົ້າຄິດວ່າມັນງ່າຍປານນັ້ນບໍ? ໂດຍສະເພາະແລ້ວ ມັນຈຳເປັນຫຼາຍສຳລັບທຸກຄົນທີ່ຢູ່ໃກ້ພຣະເຈົ້າຈະເອົາໃຈໃສ່ກັບສິ່ງດັ່ງກ່າວນີ້. ເມື່ອເວລາຜ່ານໄປ, ເຈົ້າຈະລືມມັນ ແລະເຈົ້າຈະຕົກສູ່ການຫຼອກລວງໂດຍບໍ່ຮູ້ຕົວ ແລະ ເຈົ້າຈະບໍ່ສົນໃຈກັບທຸກສິ່ງ ແລະ ນີ້ກໍຈະເປັນຈຸດເລີ່ມຕົ້ນຂອງການເຮັດບາບຂອງເຈົ້າ. ນີ້ເບິ່ງຄືເລື່ອງບໍ່ສຳຄັນສຳລັບເຈົ້າບໍ? ຖ້າເຈົ້າສາມາດເຮັດສິ່ງນີ້ໄດ້ດີ, ເຈົ້າກໍຈະມີໂອກາດທີ່ຈະຖືກເຮັດໃຫ້ສົມບູນ, ໄດ້ມາຢູ່ຕໍ່ໜ້າພຣະເຈົ້າ ແລະ ໄດ້ຮັບການຊີ້ນຳຈາກປາກຂອງພຣະເຈົ້າເອງ. ຖ້າເຈົ້າບໍ່ລະມັດລະວັງ, ແລ້ວມັນກໍຈະມີບັນຫາສຳລັບເຈົ້າ, ເຈົ້າຈະທ້າທາຍພຣະເຈົ້າ, ຄຳເວົ້າ ແລະ ການກະທຳຂອງເຈົ້າຈະຜິດສິນທຳ ແລະ ບໍ່ໄວກໍ່ຊ້າ ເຈົ້າກໍຈະຖືກລົມພາຍຸ ແລະ ຄື້ນທະເລຍັກພັດຫາຍໄປ. ພວກເຈົ້າທຸກຄົນຄວນເອົາໃຈໃສ່ກັບພຣະບັນຍັດເຫຼົ່ານີ້. ຖ້າເຈົ້າລະເມີດພວກມັນ, ແລ້ວເຖິງແມ່ນມະນຸດທີ່ພຣະເຈົ້າເປັນພະຍານໃຫ້ອາດຈະບໍ່ປະນາມພວກເຈົ້າ ແຕ່ພຣະວິນຍານຂອງພຣະເຈົ້າກໍຍັງຈະປະຕິບັດພາລະກິດກັບເຈົ້າ ແລະ ພຣະອົງຈະບໍ່ລະເວັ້ນເຈົ້າ. ເຈົ້າສາມາດແບກຮັບເອົາຜົນຂອງການກະທຳຜິດຂອງເຈົ້າໄດ້ບໍ? ດ້ວຍເຫດນີ້, ບໍ່ວ່າພຣະເຈົ້າຈະເວົ້າສິ່ງໃດກໍຕາມ, ເຈົ້າຕ້ອງນຳເອົາພຣະທຳຂອງພຣະອົງໄປປະຕິບັດ ແລະ ຕ້ອງຍຶດໝັ້ນໃນພຣະທຳເຫຼົ່ານີ້ດ້ວຍວິທີການໃດກໍຕາມທີ່ເຈົ້າສາມາດເຮັດໄດ້. ນີ້ບໍ່ແມ່ນເລື່ອງງ່າຍດາຍ!

# ອານາຈັກພັນປີມາຮອດແລ້ວ

ພວກເຈົ້າເຄີຍເຫັນບໍ່ວ່າພຣະເຈົ້າຈະບັນລຸພາລະກິດໃດໃນກຸ່ມຄົນເຫຼົ່ານີ້? ພຣະເຈົ້າເຄີຍກ່າວໄວ້ຄັ້ງໜຶ່ງວ່າ ເຖິງແມ່ນຢູ່ໃນອານາຈັກພັນປີ ມະນຸດຍັງຈະຕ້ອງປະຕິບັດຕາມພຣະວັດຈະນະຂອງພຣະອົງຕໍ່ໄປ ແລະ ໃນອະນາຄົດ ພຣະວັດຈະນະຂອງພຣະເຈົ້າກໍຍັງຈະນຳພາຊີວິດຂອງມະນຸດໂດຍກົງຢູ່ໃນດິນແດນທີດີແຫ່ງການາອານນີ້. ເມື່ອໂມເຊຢູ່ໃນຖິ່ນແຫ້ງແລ້ງກັນດານ, ພຣະເຈົ້າໄດ້ແນະນຳ ແລະ ເວົ້າກັບລາວໂດຍກົງ. ພຣະເຈົ້າສົ່ງອາຫານ ສົ່ງນໍ້າ ແລະ ອາຫານມານາຈາກສະຫວັນມາໃຫ້ຜູ້ຄົນ ແລະທຸກມື້ນີ້ກໍຍັງເປັນແບບນັ້ນຢູ່: ພຣະເຈົ້າໄດ້ສົ່ງສິ່ງຕ່າງໆລົງມາໃຫ້ຜູ້ຄົນກິນ ແລະ ດື່ມໂດຍພຣະອົງເອງ ແລະ ພຣະອົງໄດ້ສົ່ງຄຳສາບເພື່ອຂ້ຽນຕີຜູ້ຄົນໂດຍພຣະອົງເອງເຊັ່ນກັນ. ສະນັ້ນ ແຕ່ລະຂັ້ນຕອນຂອງພາລະກິດຂອງພຣະອົງແມ່ນຖືກດຳເນີນໂດຍຕົວພຣະເຈົ້າເອງ. ໃນທຸກມື້ນີ້ ຜູ້ສະແຫວງຫາການປະກົດຂອງຄວາມຈິງ, ພວກເຂົາສະແຫວງຫາສັນຍານບອກເຫດການ ແລະ ຄວາມມະຫັດສະຈັນ ແລະມັນອາດເປັນໄປໄດ້ທີ່ຄົນທັງໝົດດັ່ງກ່າວຈະຖືກປະຖິ້ມ ເພາະວ່າພາລະກິດຂອງພຣະເຈົ້າກຳປາກົດເປັນຈິງຫຼາຍຂຶ້ນ. ບໍ່ມີຜູ້ໃດຮູ້ວ່າພຣະເຈົ້າໄດ້ສະເດັດລົງມາຈາກສະຫວັນແລ້ວ, ພວກເຂົາຍັງບໍ່ຮູ້ຊໍ້າວ່າພຣະເຈົ້າໄດ້ສົ່ງອາຫານ ແລະ ຢາບຳລຸງຈາກສະຫວັນມາໃຫ້. ແຕ່ພຣະເຈົ້າມີຢູ່ຈິງ ແລະ ພາບທີ່ປຸກໃຈຂອງອານາຈັກພັນປີທີ່ຜູ້ຄົນຈິນຕະນາການເຖິງ ກໍເປັນພຣະວັດຈະນະສ່ວນຕົວຂອງພຣະເຈົ້າເຊັ່ນກັນ. ນີ້ເປັນຄວາມຈິງ ແລະ ມີແຕ່ສິ່ງນີ້ເທົ່ານັ້ນທີ່ຖືກເອີ້ນວ່າເປັນການປົກຄອງກັບພຣະເຈົ້າຢູ່ເທິງແຜ່ນດິນໂລກ. ການປົກຄອງກັບພຣະເຈົ້າຢູ່ໃນແຜ່ນດິນໂລກແມ່ນໝາຍເຖິງເນື້ອໜັງມະນຸດ. ສິ່ງທີ່ບໍ່ແມ່ນເນື້ອໜັງມະນຸດບໍ່ມີຢູ່ຈິງຢູ່ເທິງແຜ່ນດິນໂລກ ແລະ ດ້ວຍເຫດນັ້ນ ທຸກຄົນທີ່ສົນໃຈການໄປສະຫວັນທີສາມແມ່ນເຮັດໄປໂດຍທີ່ບໍ່ມີປະໂຫຍດຫຍັງ. ມື້ໜຶ່ງ ເມື່ອຈັກກະວານທັງໝົດກັບຄືນຫາພຣະເຈົ້າ ສູນກາງພາລະກິດຂອງພຣະອົງໃນທົ່ວຈັກກະວານຈະປະຕິບັດຕາມພຣະວັດຈະນະຂອງພຣະອົງ; ໃນຂະນະຢູ່ບ່ອນອື່ນ, ບາງຄົນຈະໃຊ້ໂທລະສັບ, ບາງຄົນຈະຂີ່ຍົນ, ບາງຄົນຈະຂີ່ເຮືອຂ້າມທະເລ ແລະ ບາງຄົນຈະໃຊ້ເລເຊີເພື່ອຮັບເອົາພຣະວັດຈະນະຂອງພຣະເຈົ້າ. ທຸກຄົນຈະຮັກໄຄ່ ແລະ ເຕັມໄປດ້ວຍຄວາມປາດຖະໜາ, ພວກເຂົາທັງໝົດຈະມາໃກ້ພຣະເຈົ້າ, ຮ່ວມກັນເຂົ້າຫາພຣະເຈົ້າ ແລະ ທຸກຄົນຈະນະມັດສະການພຣະເຈົ້າ. ທັງໝົດນີ້ຈະເປັນການກະທຳຂອງພຣະເຈົ້າ. ຈົ່ງຈື່ສິ່ງນີ້ໄວ້! ພຣະເຈົ້າຈະບໍ່ເລີ່ມຕົ້ນຢູ່ບ່ອນອື່ນອີກຢ່າງແນ່ນອນ. ພຣະເຈົ້າຈະບັນລຸຄວາມຈິງນີ້: ພຣະອົງຈະເຮັດໃຫ້ທຸກຄົນໃນທົ່ວຈັກກະວານມາຢູ່ຕໍ່ໜ້າພຣະອົງ ແລະ ນະມັດສະການພຣະເຈົ້າຢູ່ເທິງແຜ່ນດິນໂລກ ແລະ ພາລະກິດຂອງພຣະອົງຢູ່ບ່ອນອື່ນຈະຢຸດ ແລະ ຜູ້ຄົນຈະຖືກບັງຄັບໃຫ້ຊອກຫາຫົນທາງທີ່ແທ້ຈິງ. ມັນຈະເປັນຄືໂຢເຊັບ: ທຸກຄົນມາຫາລາວເພື່ອຂໍອາຫານ ແລະ ກົ້ມກາບລາວ ເພາະລາວມີອາຫານໃຫ້ກິນ. ເພື່ອຫຼີກລ່ຽງຄວາມອຶດຫິວ ຜູ້ຄົນຈະຖືກບັງຄັບເພື່ອຊອກຫາຫົນທາງທີ່ແທ້ຈິງ. ຊຸມຊົນສາສະໜາທັງໝົດຈະປະສົບກັບຄວາມອຶດຫິວຢ່າງຮ້າຍແຮງ ແລະ ພຽງແຕ່ພຣະເຈົ້າໃນຍຸກປັດຈຸບັນເທົ່ານັ້ນທີ່ເປັນແຫຼ່ງນໍ້າແຫ່ງຊີວິດ ທີ່ມີແຫຼ່ງນໍ້າທີ່ໄຫຼຕະຫຼອດເພື່ອສະໜອງຄວາມສຸກໃຫ້ແກ່ມະນຸດ ແລະ ຜູ້ຄົນຈະມາຫາ

ແລະ ເພິ່ງພາອາໄສພຣະອົງ. ນັ້ນຈະແມ່ນເວລາທີ່ການກະທຳຂອງພຣະເຈົ້າຖືກເປີດເຜີຍ ແລະ ເມື່ອພຣະເຈົ້າໄດ້ຮັບສະຫງ່າລາສີ; ທຸກຄົນໃນທົ່ວຈັກກະວານຈະນະມັດສະການ "ມະນຸດ" ທີ່ທຳມະດາຄົນນີ້. ນີ້ບໍ່ແມ່ນມື້ແຫ່ງລັດສະໝີຂອງພຣະເຈົ້າບໍ? ໃນມື້ໜຶ່ງ ນັກບວດທີ່ແກ່ຊະລາຈະສົ່ງໂທລະເລກໄປຂໍນໍ້າຈາກແຫຼ່ງນໍ້າແຫ່ງຊີວິດ. ເຖິງພວກເຂົາຈະເປັນຄົນແກ່ຊະລາ ແຕ່ພວກເຂົາຍັງຈະນະມັດສະການຄົນຜູ້ນີ້ຜູ້ທີ່ພວກເຂົາເຄີຍດູຖູກຢຽດຫຍາມ. ພວກເຂົາຈະຮັບຮູ້ພຣະອົງດ້ວຍປາກຂອງພວກເຂົາ ແລະຈະເຊື່ອໝັ້ນພຣະອົງດ້ວຍຫົວໃຈຂອງພວກເຂົາ ແລ້ວນີ້ບໍ່ແມ່ນສັນຍານບອກເຫດການ ແລະຄວາມມະຫັດສະຈັນບໍ? ເມື່ອອານາຈັກທັງໝົດມີຄວາມປິຕິຍິນດີ ນັ້ນກໍຄືມື້ແຫ່ງລັດສະໝີຂອງພຣະເຈົ້າ ແລະ ໃຜກໍຕາມທີ່ມາຫາພວກເຈົ້າ ແລະ ຮັບເອົາຂ່າວດີຈາກພຣະເຈົ້າຈະໄດ້ຮັບພອນຈາກພຣະເຈົ້າ ແລະ ປະເທດຕ່າງໆ ແລະ ຜູ້ຄົນທີ່ເຮັດເຊັ່ນນັ້ນຈະໄດ້ຮັບພອນ ແລະ ການດູແລເບິ່ງແຍງຈາກພຣະເຈົ້າ. ທິດທາງໃນອະນາຄົດຈະເປັນດັ່ງນີ້: ຜູ້ຄົນທີ່ໄດ້ຮັບພຣະວັດຈະນະຈາກປາກຂອງພຣະເຈົ້າຈະມີເສັ້ນທາງໃຫ້ຍ່າງຢູ່ເທິງແຜ່ນດິນໂລກ ແລະ ບໍ່ວ່າຈະເປັນນັກທຸລະກິດ ຫຼື ນັກວິທະຍາສາດ ຫຼື ຜູ້ໃຫ້ການສຶກສາ ຫຼື ນັກອຸດສາຫະກຳຕ່າງໆ, ຜູ້ຄົນທີ່ບໍ່ມີພຣະທຳຂອງພຣະເຈົ້າຈະມີຄວາມຍາກລຳບາກແມ່ນແຕ່ບາດກ້າວດຽວ ແລະ ຈະຖືກບັງຄັບໃຫ້ຊອກຫາຫົນທາງທີ່ແທ້ຈິງ. ນີ້ຄືຄວາມໝາຍທີ່ວ່າ "ດ້ວຍຄວາມຈິງ ເຈົ້າຈະໄປໄດ້ທົ່ວໂລກ; ປາສະຈາກຄວາມຈິງ ເຈົ້າກໍຈະໄປໃສບໍ່ໄດ້". ຄວາມຈິງມີດັ່ງນີ້: ພຣະເຈົ້າຈະໃຊ້ວິທີທາງ (ເຊິ່ງໝາຍເຖິງພຣະທຳຂອງພຣະອົງທັງໝົດ) ເພື່ອບັນຊາຈັກກະວານທັງໝົດ ແລະ ປົກຄອງ ແລະ ເອົາຊະນະມະນຸດ. ຜູ້ຄົນຫວັງສະເໝີເພື່ອໃຫ້ມີການປ່ຽນແປງທີ່ຍິ່ງໃຫຍ່ໃນການດຳເນີນພາລະກິດຂອງພຣະເຈົ້າ. ເວົ້າງ່າຍໆກໍຄື ພຣະເຈົ້າຄວບຄຸມມະນຸດຜ່ານພຣະທຳ ແລະເຈົ້າຕ້ອງເຮັດໃນສິ່ງທີ່ພຣະອົງບອກ ບໍ່ວ່າເຈົ້າຈະຕ້ອງການ ຫຼື ບໍ່ກໍຕາມ; ນີ້ແມ່ນຂໍ້ແທ້ຈິງທີ່ກົງໄປກົງມາ ແລະ ທຸກຄົນຕ້ອງໄດ້ເຊື່ອຟັງ ແລະ ເຊັ່ນດຽວກັນ ທຸກຄົນຕ້ອງຮູ້ວ່າມັນບໍ່ສາມາດຜ່ອນຜັນໄດ້.

ພຣະວິນຍານບໍລິສຸດໃຫ້ຄວາມຮູ້ສຶກແກ່ຜູ້ຄົນ. ຫຼັງຈາກອ່ານພຣະທຳຂອງພຣະເຈົ້າ ຜູ້ຄົນແມ່ນຮູ້ສຶກໝັ້ນຄົງ ແລະ ມີຄວາມສະຫງົບສຸກໃນຫົວໃຈຂອງເຂົາເຈົ້າ ໃນຂະນະຜູ້ທີ່ບໍ່ໄດ້ຮັບພຣະທຳຂອງພຣະເຈົ້າຈະຮູ້ສຶກວ່າງເປົ່າ. ນັ້ນແມ່ນພະລັງຂອງພຣະທຳຂອງພຣະເຈົ້າ. ຜູ້ຄົນຈຳເປັນຕ້ອງອ່ານພຣະທຳແລະຫຼັງຈາກອ່ານພຣະທຳແລ້ວ ພວກເຂົາຈະໄດ້ຮັບການບຳລຸງລ້ຽງ ແລະ ພວກເຂົາບໍ່ສາມາດປະຕິບັດໂດຍບໍ່ມີພຣະທຳ. ຄືດັ່ງເວລາທີ່ຜູ້ຄົນໃຊ້ຢາຝິ່ນ: ມັນໃຫ້ພາລະກຳລັງແກ່ເຂົາເຈົ້າ ແລະ ຖ້າບໍ່ມີມັນ ພວກເຂົາກໍຮູ້ສຶກແງ້ນ ແລະ ຂາດເຫື່ອແຮງ. ນັ້ນແມ່ນແນວໂນ້ມໃນທ່າມກາງກຸ່ມຜູ້ຄົນໃນທຸກມື້ນີ້. ການອ່ານພຣະທຳຂອງພຣະເຈົ້າໃຫ້ຄວາມເຂັ້ມແຂງແກ່ຜູ້ຄົນ. ຖ້າພວກເຂົາບໍ່ອ່ານພຣະທຳພວກເຮົາຮູ້ສຶກບໍ່ມີຊີວິດຊີວາ ແຕ່ຫຼັງຈາກອ່ານພຣະທຳແລ້ວ ພວກເຂົາກໍລຸກຂຶ້ນຈາກ "ຕຽງຄົນເຈັບ" ຂອງພວກເຂົາທັນທີ. ນີ້ແມ່ນການສະແດງພະລັງອຳນາດຈາກພຣະທຳຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ແລະ ການປົກຄອງແຜ່ນດິນໂລກຂອງພຣະເຈົ້າ. ບາງຄົນຕ້ອງການຈາກໄປ ຫຼື ເບື່ອໜ່າຍກັບພາລະກິດຂອງພຣະເຈົ້າ. ບໍ່ວ່າແນວໃດກໍຕາມ ພວກເຂົາບໍ່ສາມາດແຍກຕົວເອງອອກຈາກພຣະທຳຂອງພຣະເຈົ້າໄດ້; ບໍ່ວ່າພວກເຂົາຈະອ່ອນແອພຽງໃດ ພວກເຂົາຍັງຕ້ອງດຳລົງຊີວິດດ້ວຍພຣະທຳຂອງພຣະເຈົ້າ ແລະ

ບໍ່ວ່າພວກເຂົາຈະຕໍ່ຕ້ານພຽງໃດ, ພວກເຂົາກໍບໍ່ກ້າອອກຈາກພຣະທຳຂອງພຣະເຈົ້າໄດ້. ເມື່ອພຣະທຳຂອງພຣະເຈົ້າສະແດງອຳນາດ ນັ້ນແມ່ນເວລາທີ່ພຣະເຈົ້າປົກຄອງ ແລະ ໃຊ້ພະລັງອຳນາດ; ນີ້ແມ່ນວິທີທີ່ພຣະເຈົ້າດຳເນີນພາລະກິດ. ບໍ່ວ່າຢ່າງໃດກໍຕາມ, ນີ້ແມ່ນວິທີທີ່ພຣະເຈົ້າດຳເນີນພາລະກິດ ແລະ ບໍ່ມີຜູ້ໃດສາມາດຫລີກເວັ້ນພາລະກິດນີ້ໄດ້. ພຣະທຳຂອງພຣະເຈົ້າຈະເຜີຍແຜ່ໄປຍັງເຮືອນຈຳນວນນັບບໍ່ຖ້ວນ, ພຣະທຳຈະຖືກຮັບຮູ້ໂດຍທຸກຄົນ ແລະ ເມື່ອນັ້ນເທົ່ານັ້ນພາລະກິດຂອງພຣະອົງຈະເຜີຍແຜ່ໄປທົ່ວຈັກກະວານ. ນັ້ນໝາຍຄວາມວ່າ ຖ້າພາລະກິດຂອງພຣະເຈົ້າຈະຖືກເຜີຍແຜ່ໄປທົ່ວທັງຈັກກະວານ ພຣະທຳຂອງພຣະອົງກໍຕ້ອງໄດ້ຮັບການເຜີຍແຜ່. ໃນມື້ແຫ່ງຄວາມສະຫງ່າລາສີຂອງພຣະເຈົ້າ ພຣະທຳຂອງພຣະເຈົ້າຈະສະແດງລິດເດດ ແລະ ອຳນາດ. ພຣະທຳທຸກຂໍ້ຂອງພຣະອົງ ຈາກເວລາທີ່ດົນນານມາແລ້ວຈົນຮອດມື້ນີ້ຈະບັນລຸຜົນ ແລະ ຈະເກີດຂຶ້ນ. ດ້ວຍວິທີນີ້ ລັດສະໝີພາບຈະເປັນຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ເຊິ່ງໝາຍຄວາມວ່າ ພຣະທຳຂອງພຣະອົງຈະປົກຄອງແຜ່ນດິນໂລກ. ທຸກຄົນທີ່ຊົ່ວຮ້າຍຈະຖືກຂ້ຽນຕີໂດຍພຣະທຳຈາກປາກຂອງພຣະເຈົ້າ, ທຸກຄົນທີ່ມີຄວາມຊອບທຳຈະໄດ້ຮັບພອນຈາກພຣະທຳທີ່ກ່າວຈາກປາກຂອງພຣະອົງ ແລະ ທຸກຄົນຈະຖືກຈັດຕັ້ງ ແລະ ເຮັດໃຫ້ສົມບູນໂດຍພຣະທຳຈາກປາກຂອງພຣະອົງ. ພຣະອົງຈະບໍ່ສະແດງສັນຍານບອກເຫດການ ຫຼື ສະແດງຄວາມອັດສະຈັນໃດໆ; ທັງໝົດຈະບັນລຸຜົນໂດຍພຣະທຳຂອງພຣະອົງ ແລະ ພຣະທຳຂອງພຣະອົງຈະສ້າງຄວາມຈິງ. ທຸກຄົນໃນແຜ່ນດິນໂລກຈະສະເຫຼີມສະຫຼອງພຣະທຳຂອງພຣະເຈົ້າ, ບໍ່ວ່າພວກເຂົາຈະເປັນຜູ້ໃຫຍ່ ຫຼື ເດັກນ້ອຍ, ຜູ້ຊາຍ, ແມ່ຍິງ, ຄົນເຖົ້າ ຫຼື ຄົນໜຸ່ມ ທຸກຄົນຈະຍອມອ່ອນນ້ອມພາຍໃຕ້ພຣະທຳຂອງພຣະເຈົ້າ. ພຣະທຳຂອງພຣະເຈົ້າປາກົດໃນເນື້ອໜັງ ໂດຍທີ່ເຮັດໃຫ້ຜູ້ຄົນໄດ້ເຫັນພຣະທຳເຫຼົ່ານັ້ນເທິງແຜ່ນດິນໂລກຢ່າງຈະແຈ້ງ ແລະ ໃນຮູບແບບທີ່ມີຊີວິດ. ນີ້ຄືຄວາມໝາຍທີ່ວ່າພຣະທຳກາຍເປັນເນື້ອໜັງ. ພຣະເຈົ້າໄດ້ມາຍັງແຜ່ນດິນໂລກໂດຍຕົ້ນຕໍແລ້ວແມ່ນເພື່ອບັນລຸຄວາມຈິງກ່ຽວກັບ "ພຣະທຳກາຍເປັນເນື້ອໜັງ" ເຊິ່ງໝາຍຄວາມວ່າ ພຣະອົງໄດ້ມາເພື່ອໃຫ້ພຣະທຳຂອງພຣະອົງສາມາດກ່າວອອກມາຈາກເນື້ອໜັງ (ບໍ່ຄືກັນກັບຍຸກສະໄໝຂອງໂມເຊໃນພັນທະສັນຍາເກົ່າ ໃນຕອນທີ່ສຽງຂອງພຣະເຈົ້າດັງອອກມາຈາກທ້ອງຟ້າໂດຍກົງ). ຫຼັງຈາກນັ້ນ ພຣະທຳທຸກຂໍ້ຂອງພຣະອົງຈະບັນລຸຜົນໃນຊ່ວງຍຸກອານາຈັກພັນປີ, ພຣະທຳຈະກາຍເປັນຄວາມຈິງທີ່ມະນຸດເບິ່ງເຫັນໄດ້ກັບຕາ ແລະ ຜູ້ຄົນຈະເຫັນພຣະທຳດ້ວຍຕາຂອງຕົນເອງໂດຍບໍ່ມີຄວາມແຕກຕ່າງຫຍັງເລີຍ. ນີ້ແມ່ນຄວາມໝາຍສູງສຸດຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ນັ້ນໝາຍຄວາມວ່າ ພາລະກິດຂອງພຣະວິນຍານຈະບັນລຸຜົນຜ່ານເນື້ອໜັງ ແລະ ຜ່ານພຣະທຳ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງ "ພຣະທຳກາຍເປັນເນື້ອໜັງ" ແລະ "ການປາກົດຕົວຂອງພຣະທຳໃນເນື້ອໜັງ". ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດກ່າວຄວາມປະສົງຂອງພຣະວິນຍານ ແລະ ມີແຕ່ພຣະເຈົ້າໃນເນື້ອໜັງມະນຸດເທົ່ານັ້ນທີ່ສາມາດກ່າວໃນນາມພຣະວິນຍານໄດ້; ພຣະທຳຂອງພຣະເຈົ້າໄດ້ສ້າງຂຶ້ນຢ່າງຈະແຈ້ງໃນການບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ທຸກຄົນຈະຖືກນຳພາໂດຍພຣະທຳດັ່ງກ່າວ. ບໍ່ມີໃຜໄດ້ຮັບການຍົກເວັ້ນ, ພວກເຂົາທຸກຄົນຈະດຳລົງຊີວິດຢູ່ພາຍໃນຂອບເຂດນີ້. ຜູ້ຄົນສາມາດຮູ້ໄດ້ຈາກພຣະວັດຈະນະເຫຼົ່ານີ້ເທົ່ານັ້ນ; ຜູ້ທີ່ບໍ່ໄດ້ຮັບ

ການນໍາພາໂດຍວິທີນີ້ຄືຜູ້ຄົນທີ່ຝັນກາງເວັນເທົ່ານັ້ນ ຖ້າພວກເຂົາຄິດວ່າພວກເຂົາສາມາດໄດ້ຮັບພຣະວັດຈະນະຈາກສະຫວັນໄດ້. ສິ່ງດັ່ງກ່າວແມ່ນອໍານາດທີ່ສະແດງໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ເຊິ່ງເຮັດໃຫ້ທຸກຄົນເຊື່ອໃນສິ່ງນີ້ດ້ວຍຄວາມເຊື່ອໝັ້ນ. ແມ່ນແຕ່ຜູ້ຊ່ຽວຊານ ແລະ ນັກບວດທີ່ໜ້ານັບຖືກໍບໍ່ສາມາດກ່າວພຣະທໍາເຫຼົ່ານີ້ໄດ້. ພວກເຂົາທຸກຄົນຕ້ອງອ່ອນນ້ອມພາຍໃຕ້ພຣະທໍາ ແລະ ບໍ່ມີໃຜຈະສາມາດເລີ່ມຕົ້ນໃໝ່ອີກໄດ້. ພຣະເຈົ້າຈະໃຊ້ພຣະທໍາເພື່ອເອົາຊະນະຈັກກະວານ. ພຣະອົງຈະເຮັດສິ່ງນີ້ໂດຍທີ່ບໍ່ໄດ້ເຮັດຜ່ານເນື້ອໜັງຈາກການບັງເກີດເປັນມະນຸດຂອງພຣະອົງ ແຕ່ຜ່ານການໃຊ້ພຣະວັດຈະນະຈາກປາກຂອງພຣະເຈົ້າທີ່ກາຍເປັນເນື້ອໜັງມະນຸດເພື່ອເອົາຊະນະມະນຸດທຸກຄົນໃນທົ່ວຈັກກະວານ; ມີພຽງສິ່ງນີ້ເທົ່ານັ້ນທີ່ແມ່ນພຣະທໍາທີ່ກາຍເປັນເນື້ອຫນັງ ແລະ ມີພຽງສິ່ງນີ້ເທົ່ານັ້ນທີ່ແມ່ນການປາກົດຕົວຂອງພຣະທໍາໃນເນື້ອໜັງ. ບາງເທື່ອ ສໍາລັບກັບມະນຸດແລ້ວ ມັນອາດຈະປາກົດວ່າພຣະເຈົ້າບໍ່ໄດ້ດໍາເນີນພາລະກິດຫຼາຍພໍປານໃດ ແຕ່ພຣະເຈົ້າໄດ້ກ່າວພຣະທໍາຂອງພຣະອົງ ແລະ ພວກເຂົາຈະເຊື່ອ ແລະ ຢໍາເກງຈົນໝົດ. ຖ້າບໍ່ມີ ຄວາມຈິງ ມະນຸດຈະຮ້ອງໂຮ່ ແລະ ກິດຮ້ອງ; ແຕ່ຖ້າມີພຣະທໍາຂອງພຣະເຈົ້າ ພວກເຂົາຈະງຽບສະຫງົບ. ແນ່ນອນວ່າພຣະເຈົ້າຈະບັນລຸຄວາມຈິງນີ້ ເພາະວ່ານີ້ແມ່ນແຜນການຂອງພຣະເຈົ້າທີ່ກໍານົດໄວ້ແຕ່ດົນນານມາແລ້ວ: ການບັນລຸຄວາມຈິງກ່ຽວກັບການມາສູ່ໂລກຂອງພຣະທໍາ. ຄວາມຈິງແລ້ວ ບໍ່ມີຄວາມຈໍາເປັນທີ່ເຮົາຕ້ອງອະທິບາຍ ເພາະການມາຮອດຂອງອານາຈັກພັນປີໃນແຜ່ນດິນໂລກແມ່ນການມາຮອດຂອງພຣະທໍາຂອງພຣະເຈົ້າໃນແຜ່ນດິນໂລກ. ການລົງມາໃໝ່ຂອງນະຄອນເຢຣູຊາເລັມຈາກສະຫວັນແມ່ນການມາຮອດຂອງພຣະທໍາຂອງພຣະເຈົ້າເພື່ອດໍາເນີນຊີວິດໃນທ່າມກາງມະນຸດ, ເພື່ອຕິດຕາມເບິ່ງທຸກການກະທໍາຂອງມະນຸດ ແລະ ທຸກຄວາມຄິດທີ່ຝັງຢູ່ໃນຈິດໃຈຂອງມະນຸດ. ນີ້ແມ່ນອີກຄວາມຈິງທີ່ພຣະເຈົ້າຈະບັນລຸຜົນ; ນີ້ແມ່ນພາບທີ່ງົດງາມຂອງອານາຈັກພັນປີ. ນີ້ແມ່ນແຜນການທີ່ພຣະເຈົ້າກໍານົດໄວ້: ພຣະທໍາຂອງພຣະອົງຈະປາກົດໃນແຜ່ນດິນໂລກເປັນເວລາໜຶ່ງພັນປີ ແລະ ພຣະທໍາຈະສະແດງທຸກການກະທໍາຂອງພຣະອົງ ເພື່ອເຮັດໃຫ້ພາລະກິດທັງໝົດຂອງພຣະອົງໃນແຜ່ນດິນໂລກສໍາເລັດ ເຊິ່ງຫຼັງຈາກໄລຍະນີ້ແລ້ວ ມະນຸດຊາດກໍຈະຈົບສິ້ນ.

# ຄວາມສຳພັນຂອງເຈົ້າກັບພຣະເຈົ້າເປັນແນວໃດ?

ໃນການເຊື່ອໃນພຣະເຈົ້າ ຢ່າງໜ້ອຍເຈົ້າຕ້ອງແກ້ໄຂບັນຫາກ່ຽວກັບການມີຄວາມສຳພັນປົກກະຕິກັບພຣະເຈົ້າ. ຖ້າເຈົ້າບໍ່ມີຄວາມສຳພັນປົກກະຕິກັບພຣະເຈົ້າ, ແລ້ວຄວາມໝາຍໃນການເຊື່ອໃນພຣະເຈົ້າກໍ່ຈະສູນຫາຍໄປ. ການສ້າງຄວາມສຳພັນປົກກະຕິກັບພຣະເຈົ້ານັ້ນບັນລຸຜົນໄດ້ຢ່າງສິ້ນເຊີງດ້ວຍຫົວໃຈທີ່ສະຫງົບຢູ່ຕໍ່ໜ້າພຣະເຈົ້າ. ການມີຄວາມສຳພັນປົກກະຕິກັບພຣະເຈົ້າໝາຍເຖິງການສາມາດບໍ່ມີຂໍ້ສົງໄສ ແລະ ບໍ່ປະຕິເສດພາລະກິດໃດໆຂອງພຣະເຈົ້າ ແລະ ສາມາດຍອມຕໍ່ພາລະກິດຂອງພຣະອົງ. ມັນໝາຍເຖິງການມີເຈດຕະນາອັນຖືກຕ້ອງຕໍ່ໜ້າພຣະເຈົ້າ, ບໍ່ວາງແຜນສຳລັບຕົວເຈົ້າເອງ ແລະ ການຄຳນຶງເຖິງຜົນປະໂຫຍດຂອງຄອບຄົວຂອງພຣະເຈົ້າໃນທຸກສິ່ງກ່ອນ; ມັນໝາຍເຖິງການຍອມຮັບການກວດສອບວິເຄາະຂອງພຣະເຈົ້າ ແລະ ການເຊື່ອຟັງການຈັດແຈງຂອງພຣະເຈົ້າ. ເຈົ້າຕ້ອງສາມາດເຮັດໃຫ້ຫົວໃຈຂອງເຈົ້າສະຫງົບຢູ່ຕໍ່ໜ້າພຣະເຈົ້າໃນທຸກສິ່ງທີ່ເຈົ້າເຮັດ. ເຖິງແມ່ນວ່າເຈົ້າບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ເຈົ້າຕ້ອງປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຈົ້າໃຫ້ດີທີ່ສຸດ. ທັນທີທີ່ຄວາມປະສົງຂອງພຣະເຈົ້າໄດ້ຖືກເປີດເຜີຍໃຫ້ແກ່ເຈົ້າ, ໃຫ້ປະຕິບັດມັນ ແລະ ມັນຈະບໍ່ຊ້າເກີນໄປ. ເມື່ອຄວາມສຳພັນຂອງເຈົ້າກັບພຣະເຈົ້າກາຍມາເປັນປົກກະຕິ, ເມື່ອນັ້ນເຈົ້າກໍ່ຈະມີຄວາມສຳພັນປົກກະຕິກັບຜູ້ຄົນເຊັ່ນດຽວກັນ. ເພື່ອສ້າງຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ, ທຸກສິ່ງຕ້ອງຖືກສ້າງບົນພື້ນຖານພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງສາມາດປະຕິບັດໜ້າທີ່ຂອງເຈົ້າຕາມພຣະທຳຂອງພຣະເຈົ້າ ແລະ ສິ່ງທີ່ພຣະເຈົ້າໄດ້ຮ້ອງຂໍ, ເຈົ້າຕ້ອງເຮັດໃຫ້ມຸມມອງຂອງເຈົ້າຊື່ກົງ ແລະ ຕ້ອງສະແຫວງຫາຄວາມຈິງໃນທຸກສິ່ງ. ເຈົ້າຕ້ອງປະຕິບັດຄວາມຈິງ ເມື່ອເຈົ້າເຂົ້າໃຈມັນ ແລະ ບໍ່ວ່າແມ່ນຫຍັງກໍຕາມຈະເກີດຂຶ້ນກັບເຈົ້າ, ເຈົ້າຕ້ອງອະທິຖານຫາພຣະເຈົ້າ ແລະ ສະແຫວງຫາດ້ວຍຫົວໃຈທີ່ເຊື່ອຟັງພຣະເຈົ້າ. ເມື່ອປະຕິບັດແບບນັ້ນ, ເຈົ້າຈະສາມາດຮັກສາຄວາມສຳພັນທີ່ເປັນປົກກະຕິກັບພຣະເຈົ້າ. ໃນເວລາດຽວກັນກັບທີ່ປະຕິບັດໜ້າທີ່ຂອງເຈົ້າຢ່າງຖືກຕ້ອງ, ເຈົ້າຍັງຕ້ອງຮັບປະກັນວ່າເຈົ້າບໍ່ໄດ້ເຮັດຫຍັງທີ່ບໍ່ເປັນປະໂຫຍດຕໍ່ທາງເຂົ້າສູ່ຊີວິດຂອງຜູ້ທີ່ພຣະເຈົ້າໄດ້ເລືອກໄວ້ ແລະ ບໍ່ເວົ້າສິ່ງທີ່ບໍ່ເປັນປະໂຫຍດຕໍ່ອ້າຍເອື້ອຍນ້ອງ. ຢ່າງໜ້ອຍທີ່ສຸດ, ເຈົ້າຕ້ອງບໍ່ເຮັດສິ່ງທີ່ຂັດກັບຄວາມສຳນຶກຂອງເຈົ້າ ແລະ ຕ້ອງບໍ່ເຮັດສິ່ງທີ່ເປັນຕາອັບອາຍແທ້ໆ. ໂດຍສະເພາະແລ້ວ, ສຳລັບສິ່ງທີ່ກະບົດ ຫຼື ຕໍ່ຕ້ານພຣະເຈົ້າ, ເຈົ້າຕ້ອງບໍ່ເຮັດມັນຢ່າງແນ່ນອນ ແລະ ເຈົ້າຕ້ອງບໍ່ເຮັດສິ່ງທີ່ລົບກວນວຽກງານ ຫຼື ຊີວິດໃນຄຣິສຕະຈັກ. ຈົ່ງມີຄວາມຍຸຕິທຳ ແລະ ມີກຽດໃນທຸກສິ່ງທີ່ເຈົ້າເຮັດ ແລະ ຮັບປະກັນວ່າມັນສາມາດນຳສະເໜີໄດ້ຕໍ່ໜ້າພຣະເຈົ້າ. ເຖິງແມ່ນວ່າບາງຄັ້ງເນື້ອໜັງອ່ອນແອ, ເຈົ້າຕ້ອງສາມາດເອົາຜົນປະໂຫຍດຂອງຄອບຄົວຂອງພຣະເຈົ້າກ່ອນ, ໂດຍບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວ ໂດຍທີ່ບໍ່ເຮັດຫຍັງທີ່ເຫັນແກ່ຕົວ ຫຼື ເປັນຕາລັງກຽດ, ມັກໄຕ່ຕອງກ່ຽວກັບຕົນເອງ. ໃນລັກສະນະນີ້, ເຈົ້າຈະສາມາດດຳລົງຊີວິດຕໍ່ໜ້າພຣະເຈົ້າຢູ່ເລື້ອຍໆ ແລະ ຄວາມສຳພັນຂອງເຈົ້າກັບພຣະເຈົ້າຈະກາຍມາເປັນສິ່ງທີ່ປົກກະຕິຢ່າງສົມບູນ.

ໃນທຸກສິ່ງທີ່ເຈົ້າເຮັດ, ເຈົ້າຕ້ອງກວດສອບເບິ່ງວ່າເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ຫຼື ບໍ່. ຖ້າເຈົ້າ

ສາມາດປະຕິບັດຕາມຄວາມຮຽກຮ້ອງຂອງພຣະເຈົ້າໄດ້, ແລ້ວຄວາມສຳພັນຂອງເຈົ້າກັບພຣະເຈົ້າກໍ່ເປັນປົກກະຕິ. ນີ້ແມ່ນມາດຕະຖານຕໍ່າສຸດ. ໃຫ້ເບິ່ງເຈດຕະນາຂອງເຈົ້າ ແລະ ຖ້າເຈົ້າຄົ້ນພົບວ່າເຈດຕະນາທີ່ບໍ່ຖືກຕ້ອງປາກົດຂຶ້ນ, ບໍ່ສາມາດຫັນຫຼັງໃສ່ພວກມັນໄດ້ ແລະ ປະຕິບັດຕາມພຣະທຳຂອງພຣະເຈົ້າ; ສະນັ້ນ ເຈົ້າກໍ່ຈະກາຍເປັນຄົນທີ່ທ່ຽງທຳຕໍ່ໜ້າພຣະເຈົ້າ ເຊິ່ງຈະສະແດງໃຫ້ເຫັນວ່າຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນປົກກະຕິ ແລະ ສິ່ງທັງໝົດທີ່ເຈົ້າເຮັດແມ່ນເພື່ອປະໂຫຍດຂອງພຣະເຈົ້າ, ບໍ່ແມ່ນເພື່ອຕົວເຈົ້າເອງ. ໃນທຸກສິ່ງທີ່ເຈົ້າເຮັດ ແລະ ທຸກສິ່ງທີ່ເຈົ້າເວົ້າ, ສາມາດວາງຫົວໃຈໃຫ້ຖືກຕ້ອງ ແລະ ຊອບທຳໃນການກະທຳຂອງເຈົ້າ ແລະ ຢ່າປ່ອຍໃຫ້ອາລົມຂອງເຈົ້າພາເຈົ້າໄປ ຫຼື ເຮັດຕາມຄວາມປະສົງຂອງຕົວເຈົ້າເອງ. ສິ່ງເຫຼົ່ານີ້ແມ່ນຫຼັກການທີ່ຜູ້ເຊື່ອໃນພຣະເຈົ້າຕ້ອງປະຕິບັດກັບຕົນເອງ. ສິ່ງເລັກໆນ້ອຍໆສາມາດເປີດເຜີຍເຈດຕະນາ ແລະ ວຸດທິພາວະຂອງຜູ້ຄົນ ແລະ ສະນັ້ນ ເພື່ອໃຫ້ຜູ້ຄົນເຂົ້າສູ່ເສັ້ນທາງແຫ່ງການເຮັດໃຫ້ສົມບູນແບບໂດຍພຣະເຈົ້າ, ພວກເຂົາຕ້ອງແກ້ໄຂເຈດຕະນາຂອງພວກເຂົາ ແລະ ຄວາມສຳພັນຂອງພວກເຂົາກັບພຣະເຈົ້າກ່ອນ. ມີແຕ່ເມື່ອຄວາມສຳພັນຂອງເຈົ້າກັບພຣະເຈົ້າເປັນປົກກະຕິ, ເຈົ້າຈຶ່ງຈະສາມາດຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້; ມີແຕ່ເມື່ອນັ້ນ, ການຈັດການ, ການລົງໂທດ, ການລົງວິໄນ ແລະ ການຫຼໍ່ຫຼອມຂອງພຣະເຈົ້າຈຶ່ງຈະບັນລຸຜົນທີ່ປາຖະໜາໄວ້ຂອງພວກມັນໃນຕົວເຈົ້າ. ນັ້ນໝາຍຄວາມວ່າ ຖ້າມະນຸດສາມາດຮັກສາພຣະເຈົ້າຢູ່ໃນຫົວໃຈຂອງພວກເຂົາ ແລະ ບໍ່ແມ່ນສະແຫວງຫາຜົນປະໂຫຍດສ່ວນຕົວ ຫຼື ບໍ່ຄິດກ່ຽວກັບອະນາຄົດສ່ວນຕົວຂອງພວກເຂົາເອງ (ໃນຄວາມຮູ້ສຶກດ້ານເນື້ອໜັງ), ແຕ່ກົງກັນຂ້າມພວກເຂົາແບກຫາບພາລະຂອງການເຂົ້າສູ່ຊີວິດ, ເຮັດດີທີ່ສຸດເພື່ອສະແຫວງຫາຄວາມຈິງ ແລະ ຍອມຕໍ່ພາລະກິດຂອງພຣະເຈົ້າ, ຖ້າເຈົ້າສາມາດເຮັດແບບນີ້ໄດ້, ແລ້ວເປົ້າໝາຍທີ່ເຈົ້າສະແຫວງຫາກໍຈະຖືກຕ້ອງ ແລະ ຄວາມສຳພັນຂອງເຈົ້າກັບພຣະເຈົ້າກໍຈະເປັນປົກກະຕິ. ສາມາດເວົ້າໄດ້ວ່າ ການເຮັດຄວາມສຳພັນກັບພຣະເຈົ້າຂອງຄົນໆໜຶ່ງກັບພຣະເຈົ້າແມ່ນບາດກ້າວທຳອິດໃນການເຂົ້າສູ່ການເດີນທາງຝ່າຍຈິດວິນຍານ. ເຖິງແມ່ນວ່າຊະຕາກຳຂອງມະນຸດຢູ່ໃນມືຂອງພຣະເຈົ້າ ແລະ ໄດ້ຖືກພຣະເຈົ້າກຳນົດໄວ້ລ່ວງໜ້າແລ້ວ ແລະ ມະນຸດບໍ່ສາມາດປ່ຽນແປງໄດ້, ບໍ່ວ່າເຈົ້າສາມາດຖືກພຣະເຈົ້າເຮັດໃຫ້ສົມບູນແບບ ຫຼື ຖືກຮັບເອົາໂດຍພຣະອົງ ຫຼື ບໍ່ນັ້ນ ແມ່ນຂຶ້ນຢູ່ກັບວ່າຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນປົກກະຕິ ຫຼື ບໍ່. ອາດມີພາກສ່ວນໃນຕົວເຈົ້າທີ່ອ່ອນແອ ຫຼື ບໍ່ເຊື່ອຟັງ ແຕ່ວ່າຕາບໃດທີ່ມຸມມອງຂອງເຈົ້າ ແລະ ເຈດຕະນາຂອງເຈົ້າຖືກຕ້ອງ ແລະ ຕາບໃດທີ່ຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນຖືກຕ້ອງ ແລະ ເປັນປົກກະຕິ, ເມື່ອນັ້ນ ເຈົ້າຈຶ່ງຈະມີຄຸນສົມບັດທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບ. ຖ້າເຈົ້າບໍ່ມີຄວາມສຳພັນທີ່ຖືກຕ້ອງກັບພຣະເຈົ້າ ແລະ ປະຕິບັດເພື່ອຜົນປະໂຫຍດຂອງເນື້ອໜັງ ຫຼື ຄອບຄົວຂອງເຈົ້າ, ແລ້ວບໍ່ວ່າເຈົ້າຈະພະຍາຍາມຫຼາຍພຽງໃດກໍ່ຕາມ ມັນກໍ່ຈະບໍ່ມີປະໂຫຍດຫຍັງເລີຍ. ຖ້າຄວາມສຳພັນຂອງເຈົ້າກັບພຣະເຈົ້າປົກກະຕິ, ແລ້ວສິ່ງອື່ນໆກໍ່ຈະລົງຕົວເອງ. ພຣະເຈົ້າບໍ່ແນມເບິ່ງສິ່ງອື່ນໃດອີກ, ແຕ່ພຣະອົງພຽງແນມເບິ່ງວ່າມຸມມອງຂອງເຈົ້າກ່ຽວກັບການເຊື່ອໃນພຣະເຈົ້ານັ້ນຖືກຕ້ອງ ຫຼື ບໍ່: ເຈົ້າເຊື່ອໃຜ, ເຈົ້າເຊື່ອໃນຜົນປະໂຫຍດຂອງໃຜ ແລະ ເປັນຫຍັງເຈົ້າຈຶ່ງ

ເຊື່ອ. ຖ້າເຈົ້າສາມາດເບິ່ງເຫັນສິ່ງເຫຼົ່ານີ້ໄດ້ຢ່າງຊັດເຈນ ແລະ ປະຕິບັດໂດຍປະຖິ້ມມຸມມອງຂອງເຈົ້າໄດ້ເປັນຢ່າງດີ, ແລ້ວເຈົ້າກໍ່ຈະມີຄວາມກ້າວໜ້າໃນຊີວິດຂອງເຈົ້າ ແລະ ເຈົ້າຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໄດ້ຢ່າງແນ່ນອນ. ຖ້າຄວາມສຳພັນຂອງເຈົ້າກັບພຣະເຈົ້າບໍ່ປົກກະຕິ ແລະ ມຸມມອງໃນຄວາມເຊື່ອຂອງເຈົ້າພຣະເຈົ້າຜິດປົກກະຕິ, ແລ້ວທຸກສິ່ງເຫຼົ່ານີ້ກໍຈະເປົ່າປະໂຫຍດ ແລະ ບໍ່ວ່າເຈົ້າຈະເຊື່ອໃນພຣະເຈົ້າຫຼາຍສໍ່າໃດກໍຕາມ, ເຈົ້າຈະບໍ່ໄດ້ຮັບຫຍັງເລີຍ. ມີແຕ່ຫຼັງຈາກທີ່ຄວາມສຳພັນຂອງເຈົ້າກັບພຣະເຈົ້າເປັນປົກກະຕິ ເຈົ້າຈຶ່ງຈະໄດ້ຮັບຄຳຍ້ອງຍໍຈາກພຣະອົງ ເມື່ອເຈົ້າປະຖິ້ມເນື້ອໜັງ, ອະທິຖານ, ທົນທຸກທໍລະມານ, ອົດທົນ, ຍອມ ແລະ ຊ່ວຍເຫຼືອອ້າຍເອື້ອຍນ້ອງຂອງເຈົ້າ, ເສຍສະຫຼະຕົວເຈົ້າເອງໃຫ້ກັບພຣະເຈົ້າຫຼາຍຂຶ້ນ ແລະ ອື່ນໆອີກ. ບໍ່ວ່າສິ່ງທີ່ເຈົ້າເຮັດຈະມີຄຸນຄ່າ ແລະ ມີຄວາມໝາຍ ຫຼື ບໍ່ນັ້ນ ແມ່ນຂຶ້ນຢູ່ກັບວ່າເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ແລະ ມຸມມອງຂອງເຈົ້ານັ້ນຖືກຕ້ອງ ຫຼື ບໍ່. ທຸກມື້ນີ້, ຫຼາຍຄົນເຊື່ອໃນພຣະເຈົ້າ ຄືກັບການງ່ຽງຫົວເບິ່ງໂມງ, ທັດສະນະຂອງພວກເຂົາແມ່ນບໍ່ປົກກະຕິ ແລະ ທຸກສິ່ງທຸກຢ່າງຈະຖືກຕ້ອງພ້ອມກັບການພັດທະນາທີ່ດີຂຶ້ນ. ຖ້າບັນຫານີ້ຖືກແກ້ໄຂ, ທຸກສິ່ງກໍຈະເປັນປົກກະຕິ; ຖ້າບໍ່, ທຸກສິ່ງທຸກຢ່າງກໍ່ຈະບໍ່ມີປະໂຫຍດຫຍັງເລີຍ. ບາງຄົນປະພຶດດີຕໍ່ໜ້າເຮົາ, ແຕ່ລັບຫຼັງເຮົາ ສິ່ງທີ່ພວກເຂົາເຮັດມີພຽງແຕ່ຕໍ່ຕ້ານ. ສິ່ງເຫຼົ່ານີ້ແມ່ນສະແດງເຖິງຄວາມຄົດໂກງ ແລະ ການຫຼອກລວງ ແລະ ຄົນປະເພດນີ້ແມ່ນຜູ້ຮັບໃຊ້ຂອງຊາຕານ; ພວກເຂົາແມ່ນຕົວຕົນຂອງຊາຕານໂດຍແທ້, ມາເພື່ອທົດລອງພຣະເຈົ້າ. ເຈົ້າເປັນພຽງຄົນຊອບທຳຄົນໜຶ່ງ ຖ້າເຈົ້າສາມາດຍອມຕໍ່ພາລະກິດຂອງເຮົາ ແລະ ພຣະທຳຂອງເຮົາ. ຕາບໃດທີ່ເຈົ້າສາມາດກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ຕາບໃດທີ່ທຸກໆສິ່ງທີ່ເຈົ້າເຮັດນັ້ນຮຽບຮ້ອຍຕໍ່ໜ້າພຣະເຈົ້າ ແລະ ເຈົ້າປະພຶດຢ່າງຊອບທຳ ແລະ ມີກຽດໃນທຸກສິ່ງທີ່ເຈົ້າເຮັດ, ຕາບໃດທີ່ເຈົ້າບໍ່ເຮັດໃນສິ່ງທີ່ໜ້າອັບອາຍ ຫຼື ສິ່ງຕ່າງໆທີ່ຈະທຳຮ້າຍຊີວິດຂອງຄົນອື່ນ; ແລະ ຕາບໃດທີ່ເຈົ້າດຳລົງຊີວິດຢູ່ໃນແສງສະຫວ່າງ ແລະ ບໍ່ຍອມໃຫ້ຊາຕານເອົາປຽບພວກເຈົ້າເອງ, ເມື່ອນັ້ນ ຄວາມສຳພັນຂອງເຈົ້າກັບພຣະເຈົ້າກໍຈະຢູ່ໃນລັກສະນະທີ່ຖືກຕ້ອງ.

ການເຊື່ອພຣະເຈົ້າຮຽກຮ້ອງໃຫ້ທ່ານວາງເຈດຕະນາ ແລະ ມຸມມອງຂອງເຈົ້າໃນລຳດັບທີ່ຖືກຕ້ອງ; ເຈົ້າຕ້ອງມີຄວາມເຂົ້າໃຈທີ່ຖືກຕ້ອງ ແລະ ວິທີການປະຕິບັດທີ່ຖືກຕ້ອງ, ພຣະທຳຂອງພຣະເຈົ້າ ແລະ ພາລະກິດຂອງພຣະເຈົ້າ, ສະພາບແວດລ້ອມທັງໝົດທີ່ພຣະເຈົ້າຈັດແຈງໃຫ້, ມະນຸດທີ່ພຣະເຈົ້າເປັນພະຍານໃຫ້ ແລະ ພຣະເຈົ້າອົງແທ້ຈິງ. ເຈົ້າຕ້ອງບໍ່ປະຕິບັດຕາມແນວຄິດຂອງເຈົ້າເອງ ຫຼື ສ້າງກົນອຸບາຍນ້ອຍໆຂອງເຈົ້າເອງ. ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ, ເຈົ້າຕ້ອງສາມາດສະແຫວງຫາຄວາມຈິງ ແລະ ຍອມຮັບພາລະກິດທັງໝົດຂອງພຣະເຈົ້າ ໃນຖານະທີ່ເຈົ້າເປັນສິ່ງຖືກສ້າງ. ຖ້າເຈົ້າປາຖະໜາທີ່ຈະສະແຫວງຫາການຖືກພຣະເຈົ້າເຮັດໃຫ້ສົມບູນແບບ ແລະ ເຂົ້າສູ່ເສັ້ນທາງແຫ່ງຊີວິດທີ່ຖືກຕ້ອງ, ແລ້ວຫົວໃຈຂອງເຈົ້າຕ້ອງດຳລົງຢູ່ຕໍ່ໜ້າພຣະເຈົ້າສະເໝີ. ຢ່າເຮັດຜິດສິນທຳ, ຢ່າຕິດຕາມຊາຕານ, ຢ່າປ່ອຍໃຫ້ຊາຕານມີໂອກາດໃດໜຶ່ງທີ່ຈະປະຕິບັດພາລະກິດຂອງມັນ ແລະ ຢ່າປ່ອຍໃຫ້ຊາຕານໃຊ້ເຈົ້າ. ເຈົ້າຕ້ອງມອບຕົວເອງໃຫ້ພຣະເຈົ້າຢ່າງສົມບູນ ແລະ ປ່ອຍໃຫ້ພຣະເຈົ້າປົກຄອງເຈົ້າ.

ເຈົ້າເຕັມໃຈທີ່ຈະເປັນຜູ້ຮັບໃຊ້ຂອງຊາຕານບໍ? ເຈົ້າເຕັມໃຈທີ່ຈະຖືກຊາຕານເອົາປຽບບໍ? ເຈົ້າ

ເຊື່ອໃນພຣະເຈົ້າ ແລະ ສະແຫວງຫາພຣະເຈົ້າ ເພື່ອວ່າເຈົ້າຈະໄດ້ຖືກພຣະອົງເຮັດໃຫ້ສົມບູນແບບບໍ ຫຼື ເພື່ອວ່າເຈົ້າຈະກາຍເປັນຄວາມແຕກຕ່າງສຳລັບພາລະກິດຂອງພຣະເຈົ້າບໍ? ເຈົ້າເລືອກຊີວິດທີ່ມີຄວາມໝາຍທີ່ເຈົ້າຈະຖືກຮັບໂດຍພຣະເຈົ້າ ຫຼື ຊີວິດທີ່ບໍ່ມີຄ່າ ແລະ ວ່າງເປົ່າບໍ? ເຈົ້າເລືອກທີ່ຈະຖືກພຣະເຈົ້າໃຊ້ບໍ ຫຼື ຖືກຊາຕານເອົາປຽບ? ເຈົ້າເລືອກທີ່ຈະໃຫ້ພຣະທຳ ແລະ ຄວາມຈິງຂອງພຣະເຈົ້າເຕີມເຕັມໃນຕົວເຈົ້າ ຫຼື ປ່ອຍໃຫ້ຄວາມບາບ ແລະ ຊາຕານເຕີມເຕັມໃນຕົວເຈົ້າ? ໃຫ້ພິຈາລະນາສິ່ງເຫຼົ່ານີ້ຢ່າງລະມັດລະວັງ. ໃນຊີວິດປະຈຳວັນຂອງເຈົ້າ, ເຈົ້າຕ້ອງເຂົ້າໃຈວ່າ ສິ່ງໃດທີ່ເຈົ້າເວົ້າ ແລະ ສິ່ງໃດທີ່ເຈົ້າເຮັດແມ່ນອາດກໍ່ໃຫ້ເກີດຄວາມຜິດປົກກະຕິໃນຄວາມສຳພັນຂອງເຈົ້າກັບພຣະເຈົ້າ ແລະ ຫຼັງຈາກນັ້ນໃຫ້ແກ້ໄຂຕົວຂອງເຈົ້າເອງເພື່ອເຂົ້າສູ່ວິທີການທີ່ຖືກຕ້ອງ. ຕະຫຼອດເວລານີ້, ໃຫ້ກວດສອບຄຳເວົ້າຂອງເຈົ້າ, ການກະທຳຂອງເຈົ້າ, ທຸກໆການເຄື່ອນໄຫວຂອງເຈົ້າ ແລະ ຄວາມຄິດ ແລະ ແນວຄິດທັງໝົດຂອງເຈົ້າ. ໃຫ້ຮັບຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບສະພາວະທີ່ແທ້ຈິງຂອງເຈົ້າ ແລະ ເຂົ້າສູ່ລັກສະນະພາລະກິດຂອງພຣະວິນຍານບໍລິສຸດ. ນີ້ເປັນວິທີດຽວທີ່ຈະມີຄວາມສຳພັນປົກກະຕິກັບພຣະເຈົ້າໄດ້. ໂດຍການປະເມີນເບິ່ງວ່າ ຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນປົກກະຕິ ຫຼື ບໍ່, ເຈົ້າຈຶ່ງຈະສາມາດແກ້ໄຂເຈດຕະນາຂອງເຈົ້າໃຫ້ຖືກຕ້ອງໄດ້, ເຂົ້າໃຈທຳມະຊາດ ແລະ ແກ່ນແທ້ຂອງມະນຸດ ແລະ ເຂົ້າໃຈຕົວເຈົ້າເອງໄດ້ຢ່າງແທ້ຈິງ ແລະ ໂດຍການເຮັດແບບນັ້ນ ເຈົ້າຈະສາມາດເຂົ້າສູ່ປະສົບການອັນແທ້ຈິງ, ປະຖິ້ມຕົນເອງໃນວິທີທີ່ແທ້ຈິງ ແລະ ຍອມດ້ວຍເຈດຕະນາ. ໃນຂະນະທີ່ເຈົ້າຜະເຊີນກັບເລື່ອງເຫຼົ່ານີ້ທີ່ກ່ຽວຂ້ອງກັບວ່າ ຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນປົກກະຕິ ຫຼື ບໍ່, ເຈົ້າຈະຄົ້ນພົບໂອກາດທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້ ແລະ ມາເຂົ້າໃຈຫຼາຍສະພາວະຂອງພາລະກິດຂອງພຣະວິນຍານບໍລິສຸດ. ເຈົ້າຈະສາມາດເບິ່ງທະລຸກົນອຸບາຍຫຼາຍຢ່າງຂອງຊາຕານ ແລະ ແຊກຊຶມຜ່ານການສົມຮູ້ຮ່ວມຄິດຕ່າງໆຂອງມັນ. ມີພຽງຜ່ານທາງນີ້ເທົ່ານັ້ນທີ່ຈະນຳພາໄປສູ່ການຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້. ເຈົ້າວາງຄວາມສຳພັນຂອງເຈົ້າກັບພຣະເຈົ້າໃຫ້ຖືກຕ້ອງ ເພື່ອວ່າເຈົ້າອາດຍອມຮັບເອົາການຈັດແຈງທັງໝົດຂອງພຣະເຈົ້າ ແລະ ເພື່ອວ່າເຈົ້າຈະເຂົ້າສູ່ປະສົບການແທ້ຈິງທີ່ເລິກເຊິ່ງຫຼາຍກວ່າເກົ່າ ແລະ ໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດຫຼາຍຂຶ້ນ. ເມື່ອເຈົ້າປະຕິບັດການມີຄວາມສຳພັນປົກກະຕິກັບພຣະເຈົ້າ, ໃນກໍລະນີສ່ວນໃຫຍ່ ຄວາມສຳເລັດຈະຖືກບັນລຸໂດຍການປະຖິ້ມເນື້ອໜັງ ແລະ ຜ່ານການຮ່ວມມືທີ່ແທ້ຈິງກັບພຣະເຈົ້າ. ເຈົ້າຄວນເຂົ້າໃຈວ່າ "ຫາກປາສະຈາກຫົວໃຈທີ່ໃຫ້ການຮ່ວມມື, ມັນເປັນການຍາກທີ່ຈະໄດ້ຮັບພາລະກິດຂອງພຣະເຈົ້າ; ຖ້າເນື້ອໜັງບໍ່ໄດ້ທົນທຸກກັບຄວາມຍາກລຳບາກ, ກໍ່ຈະບໍ່ມີການອວຍພອນຈາກພຣະເຈົ້າ; ຖ້າຫາກວິນຍານບໍ່ດີ້ນລົນ, ຊາຕານກໍ່ຈະບໍ່ລະອາຍໃຈ". ຖ້າເຈົ້າປະຕິບັດຫຼັກການເຫຼົ່ານີ້ ແລະ ເຂົ້າໃຈພວກມັນຢ່າງທົ່ວເຖິງ, ມຸມມອງກ່ຽວກັບຄວາມເຊື່ອຂອງເຈົ້າໃນພຣະເຈົ້າກໍ່ຈະຖືກຕ້ອງ. ໃນການປະຕິບັດໃນປັດຈຸບັນຂອງພວກເຈົ້າ, ພວກເຈົ້າຕ້ອງປະຖິ້ມຊຸດຄວາມຄິດ "ການສະແຫວງຫາເຂົ້າຈີ່ເພື່ອສະໜອງຄວາມຫິວ", ພວກເຈົ້າຕ້ອງປະຖິ້ມຊຸດຄວາມຄິດ "ທຸກສິ່ງໄດ້ສຳເລັດລົງໂດຍພຣະວິນຍານບໍລິສຸດ ແລະ ຜູ້ຄົນບໍ່ສາມາດແຊກແຊງໄດ້". ທຸກຄົນທີ່ກ່າວໃນທາງນີ້ກໍຄິດວ່າ, "ຜູ້ຄົນສາມາດເຮັດຫຍັງກໍ່ໄດ້ທີ່ພວກເຂົາ

ຕ້ອງການ ແລະ ເມື່ອເວລາມາເຖິງ ພຣະວິນຍານບໍລິສຸດຈະປະຕິບັດພາລະກິດຂອງພຣະອົງ. ຜູ້ຄົນບໍ່ຈຳເປັນຕ້ອງຢັບຢັ້ງເນື້ອໜັງ ຫຼື ຮ່ວມມື; ສິ່ງທີ່ສຳຄັນກໍ່ມີພຽງແຕ່ພວກເຂົາຖືກຂັບເຄື່ອນໂດຍພຣະວິນຍານບໍລິສຸດ". ຄວາມຄິດເຫັນເຫຼົ່ານີ້ແມ່ນບໍ່ມີເຫດຜົນທັງໝົດ. ພາຍໃຕ້ສະຖານະການເຫຼົ່ານີ້, ພຣະວິນຍານບໍລິສຸດບໍ່ສາມາດປະຕິບັດພາລະກິດໄດ້. ມັນແມ່ນມຸມມອງແບບນີ້ທີ່ຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດຢ່າງໃຫຍ່ຫຼວງ. ສ່ວນໃຫຍ່, ພາລະກິດຂອງພຣະວິນຍານບໍລິສຸດແມ່ນບັນລຸຜ່ານການຮ່ວມມືຂອງມະນຸດ. ຄົນທີ່ບໍ່ໃຫ້ການຮ່ວມມື ແລະ ບໍ່ໄດ້ຕັ້ງໃຈ ແຕ່ປາຖະໜາທີ່ຈະບັນລຸການປ່ຽນແປງໃນອຸປະນິໄສຂອງພວກເຂົາ ແລະ ຮັບເອົາພາລະກິດຂອງພຣະວິນຍານບໍລິສຸດ ແລະ ແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະເຈົ້າ, ກໍມີຄວາມຄິດເກີນເຫດຜົນ. ສິ່ງນີ້ເອີ້ນວ່າ "ການປ່ອຍປະຕົວເອງ ແລະ ການໃຫ້ອະໄພຊາຕານ". ຄົນແບບນີ້ບໍ່ມີຄວາມສຳພັນປົກກະຕິກັບພຣະເຈົ້າ. ເຈົ້າຄວນຄົ້ນພົບການເປີດເຜີຍ ແລະ ການສະແດງອອກຫຼາຍຢ່າງຂອງອຸປະນິໄສແບບຊາຕານພາຍໃນຕົວເຈົ້າ ແລະ ຄົ້ນພົບການປະຕິບັດໃດໜຶ່ງທີ່ເຈົ້າມີເຊິ່ງຢູ່ກົງກັນຂ້າມກັບສິ່ງທີ່ພຣະເຈົ້າຮຽກຮ້ອງໃນຕອນນີ້. ເຈົ້າສາມາດປະຖິ້ມຊາຕານໃນຕອນນີ້ໄດ້ບໍ? ເຈົ້າຄວນບັນລຸຄວາມສຳພັນປົກກະຕິກັບພຣະເຈົ້າ, ເຮັດຕາມເຈດຕະນາຂອງພຣະເຈົ້າ ແລະ ກາຍເປັນຄົນໃໝ່ພ້ອມກັບມີຊີວິດໃໝ່. ຢ່າອາໄສຢູ່ໃນການລ່ວງລະເມີດໃນອະດີດ; ຢ່າເສຍໃຈຫຼາຍເກີນໄປ; ໃຫ້ສາມາດຢືນຂຶ້ນ ແລະ ຮ່ວມມືກັບພຣະເຈົ້າ ແລະ ປະຕິບັດໜ້າທີ່ໆເປັນຂອງເຈົ້າໃນການປະຕິບັດ. ໃນລັກສະນະນີ້ ຄວາມສຳພັນຂອງເຈົ້າກັບພຣະເຈົ້າກໍ່ຈະເປັນປົກກະຕິ.

ຫຼັງຈາກທີ່ໄດ້ອ່ານສິ່ງນີ້, ຖ້າເຈົ້າພຽງແຕ່ຍອມຮັບຄຳເວົ້າເຫຼົ່ານີ້, ແຕ່ຫົວໃຈຂອງເຈົ້າຍັງບໍ່ຖືກດົນໃຈ ແລະ ເຈົ້າບໍ່ສະແຫວງຫາເພື່ອສ້າງຄວາມສຳພັນທີ່ເປັນປົກກະຕິກັບພຣະເຈົ້າ, ມັນກໍພິສູດໃຫ້ເຫັນວ່າເຈົ້າບໍ່ໄດ້ໃຫ້ຄວາມສຳຄັນຕໍ່ຄວາມສຳພັນຂອງເຈົ້າກັບພຣະເຈົ້າ, ມັນພິສູດວ່າມຸມມອງຂອງເຈົ້າຍັງບໍ່ຖືກຕ້ອງເທື່ອ, ເຈດຕະນາຂອງເຈົ້າຍັງບໍ່ທັນຖືກຮັບເອົາໂດຍພຣະເຈົ້າ ແລະ ນຳສະຫງ່າລາສີມາສູ່ພຣະອົງ, ແຕ່ກົງກັນຂ້າມ ແມ່ນເຮັດໃຫ້ແຜນການຂອງຊາຕານເພື່ອຮັບໄຊຊະນະ ແລະ ເພື່ອບັນລຸເປົ້າໝາຍຂອງເຈົ້າເອງ. ຄົນປະເພດນີ້ມີເຈດຕະນາ ແລະ ມຸມມອງທີ່ບໍ່ຖືກຕ້ອງ. ບໍ່ວ່າພຣະເຈົ້າໄດ້ເວົ້າສິ່ງໃດ ຫຼື ພຣະອົງເວົ້າແນວໃດ, ຜູ້ຄົນດັ່ງກ່າວກໍບໍ່ສົນໃຈ ແລະ ບໍ່ເຫັນມີການປ່ຽນແປງຫຍັງເລີຍ. ຫົວໃຈຂອງພວກເຂົາບໍ່ຮູ້ສຶກຢ້ານກົວຫຍັງ ແລະ ພວກເຂົາບໍ່ລະອາຍໃຈ. ຄົນປະເພດນີ້ແມ່ນຄົນສັບສົນທີ່ບໍ່ມີຈິດວິນຍານ. ໃຫ້ອ່ານພຣະທຳທຸກໆຂໍ້ຂອງພຣະເຈົ້າ ແລະ ນຳເອົາໄປປະຕິບັດຕາມໃຫ້ໄວຫຼັງຈາກທີ່ເຈົ້າເຂົ້າໃຈພວກມັນ. ບາງເທື່ອ, ມີເຫດການເມື່ອເນື້ອໜັງຂອງເຈົ້າອ່ອນແອ ຫຼື ເຈົ້າກະບົດ ຫຼື ເຈົ້າຕໍ່ຕ້ານ; ບໍ່ວ່າເຈົ້າໄດ້ປະພຶດແນວໃດກໍຕາມໃນອະດີດ, ມັນມີຜົນເລັກນ້ອຍ ແລະ ມັນບໍ່ສາມາດຂັດຂວາງຊີວິດຂອງເຈົ້າຈາກການເຕີບໃຫຍ່ໃນມື້ນີ້. ສະນັ້ນ ຕາບໃດທີ່ເຈົ້າສາມາດມີຄວາມສຳພັນປົກກະຕິກັບພຣະເຈົ້າໃນມື້ນີ້, ມັນກໍມີຄວາມຫວັງຢູ່. ຖ້າມີການປ່ຽນແປງໃນຕົວເຈົ້າທຸກເທື່ອທີ່ເຈົ້າອ່ານພຣະທຳຂອງພຣະເຈົ້າ ແລະ ຄົນອື່ນສາມາດບອກໄດ້ວ່າຊີວິດຂອງເຈົ້າມີການປ່ຽນແປງດີຂຶ້ນ, ມັນກໍສະແດງໃຫ້ເຫັນວ່າ ຄວາມສຳພັນຂອງເຈົ້າກັບພຣະເຈົ້າແມ່ນປົກກະຕິໃນຕອນນີ້, ມັນໄດ້ຖືກຕ້ອງແລ້ວ.

ພຣະເຈົ້າບໍ່ໄດ້ປະຕິບັດກັບຜູ້ຄົນອີງຕາມການລະເມີດຂອງພວກເຂົາ. ຫຼັງຈາກທີ່ເຈົ້າເຂົ້າໃຈ ແລະ ຕື່ນຕົວ, ຕາບໃດທີ່ເຈົ້າສາມາດເຊົາກະບົດ ຫຼື ຕໍ່ຕ້ານ, ແລ້ວພຣະເຈົ້າກໍ່ຈະຍັງມີເມດຕາຕໍ່ເຈົ້າຢູ່. ເມື່ອໃດທີ່ເຈົ້າມີຄວາມເຂົ້າໃຈ ແລະ ຄວາມຕັ້ງໃຈທີ່ຈະສະແຫວງຫາການຖືກພຣະເຈົ້າເຮັດໃຫ້ສົມບູນແບບ, ແລ້ວສະພາວະຂອງເຈົ້າຕໍ່ໜ້າພຣະເຈົ້າກໍ່ຈະເປັນປົກກະຕິ. ບໍ່ວ່າເຈົ້າເຮັດສິ່ງໃດກໍຕາມ, ໃຫ້ພິຈາລະນາສິ່ງດັ່ງຕໍ່ໄປນີ້ເມື່ອເຈົ້າກຳລັງເຮັດມັນ: ພຣະເຈົ້າຈະຄິດແນວໃດຖ້າຂ້ານ້ອຍເຮັດສິ່ງນີ້? ມັນຈະເປັນປະໂຫຍດໃຫ້ແກ່ອ້າຍເອື້ອຍນ້ອງຂອງຂ້ານ້ອຍບໍ່? ມັນຈະເປັນປະໂຫຍດໃຫ້ແກ່ພາລະກິດໃນຄົວເຮືອນຂອງພຣະເຈົ້າບໍ? ບໍ່ວ່າຈະຢູ່ໃນຄຳອະທິຖານຂອງເຈົ້າ, ການໂອ້ລົມ, ຄຳປາໄສ, ວຽກງານ ແລະ ການພົວພັນກັບຄົນອື່ນ, ໃຫ້ກວດສອບເຈດຕະນາຂອງເຈົ້າ ແລະ ກວດສອບເບິ່ງວ່າຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນປົກກະຕິ ຫຼື ບໍ່. ຖ້າເຈົ້າບໍ່ສາມາດໄຈ້ແຍກເຈດຕະນາ ແລະ ຄວາມຄິດຂອງເຈົ້າເອງ, ນີ້ໝາຍຄວາມວ່າເຈົ້າຂາດການຈຳແນກ ເຊິ່ງພິສູດໃຫ້ເຫັນວ່າເຈົ້າເຂົ້າໃຈກ່ຽວກັບຄວາມຈິງໜ້ອຍເກີນໄປ. ຖ້າເຈົ້າສາມາດເຂົ້າໃຈຢ່າງຊັດເຈນກ່ຽວກັບທຸກສິ່ງທີ່ພຣະເຈົ້າກະທຳ ແລະ ສາມາດເຫັນສິ່ງຕ່າງໆຜ່ານເລນຂອງພຣະທຳຂອງພຣະອົງ, ຢືນຢູ່ຂ້າງພຣະເຈົ້າ, ເມື່ອນັ້ນ ມຸມມອງຂອງເຈົ້າກໍຈະຖືກຕ້ອງ. ສະນັ້ນ, ການສ້າງຄວາມສຳພັນທີ່ດີກັບພຣະເຈົ້າ ແມ່ນສິ່ງທີ່ສຳຄັນທີ່ສຸດສຳລັບຜູ້ໃດກໍຕາມທີ່ເຊື່ອໃນພຣະເຈົ້າ; ທຸກຄົນຄວນປະຕິບັດຕໍ່ມັນຄືກັບວ່າເປັນສິ່ງທີ່ສຳຄັນທີ່ສຸດ ແລະ ເປັນດັ່ງເຫດການທີ່ຍິ່ງໃຫຍ່ທີ່ສຸດໃນຊີວິດຂອງພວກເຂົາ. ທຸກສິ່ງທຸກຢ່າງທີ່ເຈົ້າເຮັດຈະຖືກຊັ່ງຊາເບິ່ງວ່າ ເຈົ້າມີຄວາມສຳພັນປົກກະຕິກັບພຣະເຈົ້າ ຫຼື ບໍ່. ຖ້າຄວາມສຳພັນຂອງເຈົ້າກັບພຣະເຈົ້າປົກກະຕິ ແລະ ເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ແລ້ວກໍໃຫ້ປະຕິບັດມັນ. ເພື່ອຮັກສາຄວາມສຳພັນປົກກະຕິກັບພຣະເຈົ້າ, ເຈົ້າຕ້ອງບໍ່ຢ້ານທີ່ຈະໄດ້ຮັບການສູນເສຍໃນຜົນປະໂຫຍດສ່ວນຕົວຂອງເຈົ້າ; ເຈົ້າບໍ່ສາມາດປ່ອຍໃຫ້ຊາຕານມີໄຊຊະນະ, ເຈົ້າບໍ່ສາມາດປ່ອຍໃຫ້ຊາຕານຊື້ເອົາເຈົ້າ ແລະ ເຈົ້າບໍ່ສາມາດປ່ອຍໃຫ້ຊາຕານເຮັດໃຫ້ເຈົ້າກາຍເປັນຕົວຕະຫຼົກ. ການມີເຈດຕະນາແບບນັ້ນເປັນສັນຍານວ່າຄວາມສຳພັນຂອງເຈົ້າກັບພຣະເຈົ້ານັ້ນປົກກະຕິ. ມັນບໍ່ແມ່ນເພື່ອເນື້ອໜັງ, ແຕ່ກົງກັນຂ້າມ ມັນແມ່ນເພື່ອຄວາມສະຫງົບສຸກຂອງວິນຍານ, ເພື່ອໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ເພື່ອເຂົ້າໄປສູ່ສະພາບທີ່ຖືກຕ້ອງ, ເຈົ້າຕ້ອງສ້າງຄວາມສຳພັນທີ່ດີກັບພຣະເຈົ້າ ແລະ ວາງມຸມມອງຂອງການເຊື່ອໃນພຣະເຈົ້າຂອງເຈົ້າໃຫ້ຖືກຕ້ອງ. ນີ້ກໍ່ເພື່ອວ່າພຣະເຈົ້າອາດຮັບເອົາເຈົ້າ ແລະ ເພື່ອວ່າ ພຣະເຈົ້າອາດເປີດເຜີຍໝາກຜົນແຫ່ງພຣະທຳຂອງພຣະອົງໃນຕົວເຈົ້າ ແລະ ແສງສະຫວ່າງ ແລະ ແສງເຍືອງທາງໃຫ້ແກ່ເຈົ້າຫຼາຍຂຶ້ນ. ໃນລັກສະນະນີ້ ເຈົ້າຈະເຂົ້າສູ່ວິທີການທີ່ຖືກຕ້ອງ. ໃຫ້ສືບຕໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃນມື້ນີ້, ເຂົ້າສູ່ລັກສະນະການເຮັດວຽກໃນປັດຈຸບັນຂອງພຣະວິນຍານບໍລິສຸດ, ປະຕິບັດຕາມຂໍ້ຮຽກຮ້ອງຂອງພຣະເຈົ້າໃນມື້ນີ້, ບໍ່ປະຕິບັດຕາມຮູບແບບການປະຕິບັດແບບເກົ່າ, ບໍ່ຍຶດຕິດກັບວິທີເກົ່າໆໃນການເຮັດສິ່ງຕ່າງໆ ແລະ ເຂົ້າສູ່ລັກສະນະພາລະກິດແບບໃນມື້ນີ້ໃຫ້ໄວເທົ່າທີ່ຈະໄວໄດ້. ສະນັ້ນ ຄວາມສຳພັນຂອງເຈົ້າກັບພຣະເຈົ້າຈະເປັນປົກກະຕິຢ່າງສົມບູນ ແລະ ເຈົ້າຈະເລີ່ມເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງການເຊື່ອໃນພຣະເຈົ້າ.

# ຕັ້ງໃຈກັບຄວາມເປັນຈິງໃຫ້ຫຼາຍຂຶ້ນ

ທຸກຄົນແມ່ນມີຄວາມເປັນໄປໄດ້ທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ, ສະນັ້ນ ທຸກຄົນຄວນເຂົ້າໃຈວ່າ ການຮັບໃຊ້ພຣະເຈົ້າປະເພດໃດຈຶ່ງຈະສອດຄ່ອງກັບເຈດຕະນາຂອງພຣະອົງໄດ້ດີທີ່ສຸດ. ຄົນສ່ວນໃຫຍ່ບໍ່ຮູ້ຈັກວ່າ ການເຊື່ອໃນພຣະເຈົ້າມີຄວາມໝາຍແນວໃດ ແລະ ພວກເຂົາບໍ່ເຂົ້າໃຈວ່າ ເປັນຫຍັງພວກເຂົາຈຶ່ງຄວນເຊື່ອໃນພຣະອົງ. ນັ້ນໝາຍຄວາມວ່າ ຄົນສ່ວນໃຫຍ່ບໍ່ມີຄວາມເຂົ້າໃຈກ່ຽວກັບພາລະກິດຂອງພຣະເຈົ້າ ຫຼື ຈຸດປະສົງໃນແຜນການຄຸ້ມຄອງຂອງພຣະອົງ. ໃນປັດຈຸບັນນີ້, ຄົນສ່ວນຫຼາຍຍັງຄິດວ່າ ການເຊື່ອໃນພຣະເຈົ້າແມ່ນກ່ຽວກັບການຂຶ້ນສະຫວັນ ແລະ ການເຮັດໃຫ້ຈິດວິນຍານຂອງພວກເຂົາລອດພົ້ນ. ພວກເຂົາບໍ່ຮູ້ວ່າ ການເຊື່ອໃນພຣະເຈົ້າໝາຍຄວາມວ່າແມ່ນຫຍັງກັນແທ້; ຍິ່ງໄປກວ່ານັ້ນ, ພວກເຂົາບໍ່ມີຄວາມເຂົ້າໃຈຫຍັງເລີຍກ່ຽວກັບພາລະກິດທີ່ສຳຄັນທີ່ສຸດໃນແຜນການຄຸ້ມຄອງຂອງພຣະເຈົ້າ. ຍ້ອນເຫດຜົນຫຼາຍໆຢ່າງຂອງພວກເຂົາ, ຜູ້ຄົນຈຶ່ງບໍ່ສົນໃຈພາລະກິດຂອງພຣະເຈົ້າເລີຍ ແລະ ບໍ່ຄຳນຶງເຖິງເຈດຕະນາຂອງພຣະອົງ ຫຼື ແຜນການຄຸ້ມຄອງຂອງພຣະອົງ. ໃນຖານະເປັນຄົນຜູ້ໜຶ່ງໃນກະແສນີ້, ແຕ່ລະຄົນຄວນຮູ້ຈັກວ່າ ຈຸດປະສົງໃນແຜນການຄຸ້ມທັງໝົດຂອງພຣະເຈົ້າແມ່ນຫຍັງ, ແມ່ນຫຍັງຄືສິ່ງທີ່ພຣະອົງໄດ້ເຮັດໃຫ້ກາຍເປັນຈິງແລ້ວ, ເປັນຫຍັງພຣະອົງຈຶ່ງເລືອກຄົນກຸ່ມນີ້, ແມ່ນຫຍັງຄືຈຸດປະສົງ ແລະ ຄວາມໝາຍທີ່ພຣະອົງໄດ້ເລືອກເອົາພວກເຂົາ ແລະ ແມ່ນຫຍັງຄືສິ່ງທີ່ພຣະອົງຕ້ອງການບັນລຸໃນກຸ່ມຄົນດັ່ງກ່າວນີ້. ສຳລັບພຣະເຈົ້າທີ່ສາມາດຍົກຍໍກຸ່ມຄົນທີ່ບໍ່ເດັ່ນໃນປະເທດມັງກອນແດງໃຫຍ່ ແລະ ໄດ້ສືບຕໍ່ປະຕິບັດພາລະກິດຈົນເຖິງປັດຈຸບັນ ໂດຍພະຍາຍາມ ແລະ ເຮັດໃຫ້ພວກເຂົາສົມບູນດ້ວຍທຸກວິທີທາງ, ກ່າວພຣະທຳຈົນນັບບໍ່ຖ້ວນ, ປະຕິບັດພາລະກິດຢ່າງຫຼວງຫຼາຍ ແລະ ສິ່ງມອບວັດຖຸຮັບໃຊ້ຢ່າງຫຼວງຫຼາຍ, ສຳລັບພຣະເຈົ້າພຽງຜູ້ດຽວທີ່ໄດ້ເຮັດສຳເລັດພາລະກິດທີ່ຍິ່ງໃຫຍ່ດັ່ງກ່າວນີ້ສະແດງໃຫ້ເຫັນວ່າ ພາລະກິດຂອງພຣະອົງນັ້ນສຳຄັນຫຼາຍພຽງໃດ. ໃນເວລານີ້, ພວກເຈົ້າຍັງບໍ່ສາມາດແລເຫັນຄຸນຄ່າໃນສິ່ງນີ້ຢ່າງເຕັມທີ່. ດັ່ງນັ້ນ, ພວກເຈົ້າຕ້ອງບໍ່ເບິ່ງພາລະກິດທີ່ພຣະເຈົ້າໄດ້ປະຕິບັດໃນພວກເຈົ້າວ່າ ເປັນເລື່ອງເລັກນ້ອຍ; ມັນບໍ່ແມ່ນເລື່ອງເລັກນ້ອຍເລີຍ. ແມ່ນແຕ່ສິ່ງທີ່ພຣະເຈົ້າສະແດງໃຫ້ພວກເຈົ້າເຫັນໃນປັດຈຸບັນກໍພຽງພໍທີ່ຈະໃຫ້ພວກເຈົ້າພະຍາຍາມຢັ່ງເຖິງ ແລະ ຮູ້ຈັກ. ມີພຽງແຕ່ຖ້າເຈົ້າເຂົ້າໃຈມັນຢ່າງແທ້ຈິງ ແລະ ຢ່າງລະອຽດ, ເຈົ້າຈຶ່ງຈະສາມາດຜະເຊີນກັບມັນຢ່າງເລິກເຊິ່ງຫຼາຍຍິ່ງຂຶ້ນ ແລະ ຊີວິດຂອງເຈົ້າກໍຈະເຕີບໃຫຍ່ຂຶ້ນ. ໃນປັດຈຸບັນນີ້, ຜູ້ຄົນເຂົ້າໃຈ ແລະ ເຮັດໜ້ອຍເກີນໄປ; ພວກເຂົາ ບໍ່ສາມາດປະຕິບັດຕາມເຈດຕະນາຂອງພຣະເຈົ້າໄດ້ຢ່າງເຕັມທີ່. ນີ້ແມ່ນຄວາມບົກພ່ອງຂອງມະນຸດ ແລະ ຄວາມລົ້ມເຫຼວທີ່ພວກເຂົາບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາໃຫ້ສຳເລັດ; ດ້ວຍເຫດນັ້ນພວກເຂົາຈຶ່ງບໍ່ສາມາດບັນລຸຕາມຜົນຮັບດັ່ງປາດຖະໜາ. ພຣະວິນຍານບໍລິສຸດບໍ່ມີວິທີທາງທີ່ຈະປະຕິບັດພາລະກິດໃນຫຼາຍຄົນ ຍ້ອນວ່າພວກເຂົາມີຄວາມເຂົ້າໃຈທີ່ຕື້ນຫຼາຍກ່ຽວກັບພາລະກິດຂອງພຣະເຈົ້າ ແລະ ບໍ່ເຕັມໃຈທີ່ຈະຖືເອົາພາລະກິດແຫ່ງຄົວເຮືອນຂອງພຣະເຈົ້າເປັນສິ່ງທີ່ມີຄຸນຄ່າເມື່ອເວລາທີ່ພວກເຂົາເຮັດພາລະກິດນັ້ນ. ພວກເຂົາພຽງເຮັດໃຫ້ມັນ

ຜ່ານໆໄປ ຫຼື ບໍ່ດັ່ງນັ້ນ ກໍເຮັດຕາມຄົນສ່ວນໃຫຍ່ ຫຼື ບໍ່ດັ່ງນັ້ນກໍເຮັດເພື່ອສະແດງໃຫ້ຄົນອື່ນເຫັນ. ໃນປັດຈຸບັນນີ້, ແຕ່ລະຄົນໃນກະແສດັ່ງກ່າວນີ້ຄວນທົບທວນເບິ່ງວ່າ ພວກເຂົາໄດ້ເຮັດທຸກສິ່ງທີ່ພວກເຂົາສາມາດເຮັດໄດ້ໃນການປະຕິບັດ ແລະ ການກະທຳຂອງພວກເຂົາແລ້ວ ຫຼື ບໍ ແລະ ພວກເຂົາໄດ້ພະຍາຍາມຢ່າງເຕັມທີ່ແລ້ວ ຫຼື ບໍ. ຜູ້ຄົນບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາໃຫ້ສຳເລັດເລີຍ. ມັນບໍ່ແມ່ນວ່າ ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດຂອງພຣະອົງ ແຕ່ຜູ້ຄົນບໍ່ໄດ້ປະຕິບັດພາລະກິດຂອງພວກເຂົາເອງ, ເຊິ່ງເຮັດໃຫ້ເປັນໄປບໍ່ໄດ້ທີ່ຈະໃຫ້ພຣະວິນຍານບໍລິສຸດປະຕິບັດພາລະກິດຂອງພຣະອົງ. ພຣະເຈົ້າບໍ່ມີພຣະທຳທີ່ຈະກ່າວອີກແລ້ວ ແຕ່ຜູ້ຄົນກໍຍັງນຳບໍ່ທັນ ແລະ ພວກເຂົາແມ່ນຫ່າງໄກຫຼາຍເກີນໄປ; ພວກເຂົາບໍ່ສາມາດນຳທັນທຸກບາດກ້າວ ແລະ ບໍ່ສາມາດຕິດຕາມຮອຍບາດກ້າວຂອງພຣະເມສານ້ອຍໄດ້ຢ່າງໃກ້ຊິດ. ສິ່ງທີ່ພວກເຂົາຄວນເຊື່ອຟັງ, ພວກເຂົາກໍບໍ່ເຊື່ອຟັງ; ສິ່ງທີ່ພວກເຂົາຄວນປະຕິບັດ, ພວກເຂົາກໍບໍ່ປະຕິບັດ; ສິ່ງທີ່ພວກເຂົາຄວນອະທິຖານ, ພວກເຂົາກໍບໍ່ອະທິຖານ; ສິ່ງທີ່ພວກເຂົາຄວນປະຖິ້ມ, ພວກເຂົາກໍບໍ່ໄດ້ປະຖິ້ມ. ພວກເຂົາບໍ່ໄດ້ເຮັດສິ່ງເຫຼົ່ານີ້ເລີຍ. ດັ່ງນັ້ນ, ການສົນທະນານີ້ທີ່ ກ່ຽວກັບການໄປຮ່ວມງານລ້ຽງແມ່ນເປັນເລື່ອງວ່າງເປົ່າ; ມັນບໍ່ມີຄວາມໝາຍທີ່ແທ້ຈິງເລີຍ ແລະ ທັງໝົດແມ່ນຢູ່ໃນຈິນຕະນາການຂອງພວກເຂົາເອງ. ມັນສາມາດເວົ້າໄດ້ວ່າ ເບິ່ງຈາກປັດຈຸບັນ ຜູ້ຄົນບໍ່ໄດ້ປະຕິບັດໜ້າທີ່ຂອງພວກເຂົາເລີຍ. ທຸກສິ່ງທຸກຢ່າງແມ່ນຂຶ້ນກັບການກະທຳຂອງພຣະເຈົ້າ ແລະ ການກ່າວສິ່ງຕ່າງໆດ້ວຍຕົວພຣະອົງເອງ. ໜ້າທີ່ຂອງຜູ້ຄົນແມ່ນໜ້ອຍຫຼາຍແທ້ໆ; ຜູ້ຄົນແມ່ນຂີ້ເຫຍື້ອທີ່ບໍ່ມີປະໂຫຍດ ເຊິ່ງເປັນຄົນທີ່ບໍ່ຮູ້ຈັກປະສານງານກັບພຣະເຈົ້າ. ພຣະເຈົ້າໄດ້ກ່າວພຣະທຳຈຳນວນຮ້ອຍເຖິງພັນຄຳ ແຕ່ຜູ້ຄົນກໍຍັງບໍ່ໄດ້ໃຊ້ພຣະທຳເຫຼົ່ານັ້ນເຂົ້າໃນການປະຕິບັດຕົວຈິງ ນັ້ນກໍຄື ບໍ່ວ່າຈະເປັນການປະຖິ້ມເນື້ອໜັງ, ການໂຍນຄວາມຄິດຖິ້ມ, ການເຊື່ອຟັງພຣະເຈົ້າໃນທຸກໆສິ່ງ ໃນຂະນະທີ່ສ້າງຄວາມຢັ່ງຮູ້ ແລະ ໄດ້ຮັບຄວາມເຂົ້າໃຈຢ່າງເລິກເຊິ່ງ, ການບໍ່ໃຫ້ຜູ້ຄົນມີພື້ນທີ່ໃນຫົວໃຈຂອງພວກເຂົາ, ການກຳຈັດຮູບປັ້ນບູຊາໃນຫົວໃຈຂອງພວກເຂົາ, ການຕໍ່ຕ້ານກັບເຈດຕະນາທີ່ຜິດຂອງພວກເຂົາ, ການບໍ່ສະແດງອອກດ້ວຍອາລົມ, ການເຮັດສິ່ງຕ່າງໆຢ່າງຍຸຕິທຳ ແລະ ບໍ່ລຳອຽງ, ການຄິດກ່ຽວກັບຜົນປະໂຫຍດຂອງພຣະເຈົ້າໃຫ້ຫຼາຍຂຶ້ນ ແລະ ອິດທິພົນຂອງພວກເຂົາທີ່ມີຕໍ່ຜູ້ອື່ນເມື່ອເວລາພວກເຂົາເວົ້າ, ການເຮັດສິ່ງຕ່າງໆທີ່ເປັນປະໂຫຍດຕໍ່ພາລະກິດຂອງພຣະເຈົ້າໃຫ້ຫຼາຍຂຶ້ນ, ໃສ່ໃຈໃນການສ້າງປະໂຫຍດໃຫ້ແກ່ຄົວເຮືອນຂອງພຣະເຈົ້າໃນທຸກສິ່ງທີ່ພວກເຂົາເຮັດ, ບໍ່ປ່ອຍໃຫ້ອາລົມຂອງພວກເຂົາຄວບຄຸມພຶດຕິກຳຂອງພວກເຂົາ, ປະຖິ້ມສິ່ງທີ່ເປັນທີ່ພໍໃຈທາງເນື້ອໜັງຂອງຕົນເອງ, ກຳຈັດແນວຄວາມຄິດທີ່ເຫັນແກ່ໂຕແບບເດີມໆ ແລະ ສິ່ງອື່ນໆ. ທີ່ຈິງແລ້ວ ພວກເຂົາເຂົ້າໃຈບາງຂໍ້ຮຽກຮ້ອງເຫຼົ່ານີ້ທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ, ແຕ່ພວກເຂົາພຽງແຕ່ບໍ່ເຕັມໃຈທີ່ຈະນຳເອົາສິ່ງເຫຼົ່ານັ້ນເຂົ້າສູ່ການປະຕິບັດ. ພຣະເຈົ້າຈະສາມາດເຮັດຫຍັງໄດ້ແດ່ ແລະ ພຣະອົງຈະສາມາດປຸກໃຈພວກເຂົາໄດ້ແນວໃດ? ໃນສາຍຕາຂອງພຣະເຈົ້າ ລູກຊາຍແຫ່ງຄວາມກະບົດຍັງມີໜ້າມາເລືອກເອົາພຣະທຳຂອງພຣະອົງເພື່ອເຊີດຊູພຣະທຳເຫຼົ່ານັ້ນໄດ້ແນວໃດ? ພວກເຂົາຍັງມີໜ້າມາກິນອາຫານຂອງພຣະເຈົ້າໄດ້ແນວໃດ? ຄວາມສຳນຶກຂອງຜູ້ຄົນມີຢູ່ໃສ? ພວກເຂົາບໍ່

ສາມາດແມ່ນແຕ່ເຮັດສຳເລັດຕາມໜ້າທີ່ເລັກນ້ອຍທີ່ສຸດທີ່ພວກເຂົາຄວນເຮັດໃຫ້ສຳເລັດ, ແລ້ວແຮງໄກທີ່ພວກເຂົາຈະເຮັດໄດ້ຢ່າງສຸດຄວາມສາມາດ. ພວກເຂົາດຳລົງຊີວິດຢູ່ໃນຄວາມເພີ້ຝັນ, ບໍ່ແມ່ນບໍ? ບໍ່ສາມາດເວົ້າກ່ຽວກັບຄວາມເປັນຈິງໂດຍທີ່ບໍ່ມີການປະຕິບັດ. ນີ້ແມ່ນຄວາມຈິງທີ່ຊັດເຈນຫຼາຍ!

ພວກເຈົ້າຄວນສຶກສາບົດຮຽນຕາມຄວາມເປັນຈິງຫຼາຍຂຶ້ນກວ່າເກົ່າ. ບໍ່ຈຳເປັນຕ້ອງມີຄຳເວົ້າທີ່ຟັງຄືໃຫຍ່ໂຕແຕ່ເປົ່າວ່າງທີ່ຜູ້ຄົນເຊີດຊູ. ເມື່ອເວົ້າເຖິງການສົນທະນາກ່ຽວກັບຄວາມຮູ້, ແຕ່ລະຄົນແມ່ນມີຄວາມຮູ້ສູງກວ່າຄົນອື່ນໆ ແຕ່ພວກເຂົາກໍຍັງບໍ່ມີເສັ້ນທາງເພື່ອປະຕິບັດ. ມີຈັກຄົນທີ່ເຂົ້າໃຈຫຼັກການຂອງການປະຕິບັດ? ມີຈັກຄົນທີ່ໄດ້ຮຽນຮູ້ບົດຮຽນຕົວຈິງ? ໃຜສາມາດສົນທະນາກ່ຽວກັບຄວາມເປັນຈິງແດ່? ການທີ່ສາມາດເວົ້າກ່ຽວກັບຄວາມຮູ້ແຫ່ງພຣະທຳຂອງພຣະເຈົ້າບໍ່ໄດ້ໝາຍຄວາມວ່າ ເຈົ້າຈະມີວຸດທິພາວະທີ່ແທ້ຈິງ; ມັນພຽງແຕ່ສະແດງໃຫ້ເຫັນວ່າ ເຈົ້າເກີດມາພ້ອມກັບຄວາມສະຫຼາດ, ເຈົ້າມີພອນສະຫວັນ. ຜົນຮັບຈະບໍ່ມີຫຍັງເລີຍຖ້າເຈົ້າບໍ່ສາມາດຊີ້ໃຫ້ເຫັນເສັ້ນທາງໄດ້ ແລະ ເຈົ້າຈະເປັນຂີ້ເຫຍື້ອທີ່ໄຮ້ປະໂຫຍດ! ເຈົ້າບໍ່ໄດ້ເສແສ້ງບໍ ຖ້າເຈົ້າບໍ່ສາມາດເວົ້າສິ່ງໃດໜຶ່ງກ່ຽວກັບເສັ້ນທາງຕົວຈິງໃນການປະຕິບັດ? ເຈົ້າຈະບໍ່ເສແສ້ງບໍ ຖ້າເຈົ້າບໍ່ສາມາດສະໜອງປະສົບການຕົວຈິງຂອງເຈົ້າເອງໃຫ້ແກ່ຄົນອື່ນ ເພື່ອເປັນການໃຫ້ບົດຮຽນທີ່ພວກເຂົາສາມາດຮຽນຮູ້ ຫຼື ເປັນເສັ້ນທາງທີ່ພວກເຂົາສາມາດຕິດຕາມໄດ້? ເຈົ້າບໍ່ແມ່ນຄົນຫຼອກລວງບໍ? ເຈົ້າມີຄຸນຄ່າຫຍັງ? ຄົນດັ່ງກ່າວພຽງແຕ່ສາມາດຫຼິ້ນໃນສ່ວນຂອງ "ຜູ້ຄິດຄົ້ນທິດສະດີຂອງສັງຄົມນິຍົມ" ແລະ ບໍ່ແມ່ນ "ຜູ້ປະກອບສ່ວນທີ່ເຮັດໃຫ້ເກີດມີສັງຄົມນິຍົມ". ການບໍ່ມີຄວາມເປັນຈິງແມ່ນການບໍ່ມີຄວາມຈິງ. ການບໍ່ມີຄວາມເປັນຈິງແມ່ນບໍ່ມີປະໂຫຍດຫຍັງເລີຍ. ການບໍ່ມີຄວາມເປັນຈິງແມ່ນການເປັນຊາກສົບທີ່ຍ່າງໄດ້. ການບໍ່ມີຄວາມເປັນຈິງແມ່ນການເປັນ "ນັກຄິດທິດສະດີມາກ-ເລນິນ" ທີ່ບໍ່ມີຄ່າໃນການອ້າງອີງ. ເຮົາຂໍແນະນຳໃຫ້ພວກເຈົ້າແຕ່ລະຄົນເຊົາເວົ້າກ່ຽວກັບທິດສະດີ ແລະ ໃຫ້ເວົ້າກ່ຽວກັບບາງສິ່ງບາງຢ່າງທີ່ເປັນຈິງ, ບາງສິ່ງບາງຢ່າງທີ່ແທ້ຈິງ ແລະ ມີຄວາມຈິງ; ສຶກສາ "ສິລະປະທັນສະໄໝ" ບາງຢ່າງ, ເວົ້າບາງສິ່ງຕາມຄວາມເປັນຈິງ, ປະກອບສ່ວນບາງສິ່ງຕາມຄວາມເປັນຈິງ ແລະ ມີຈິດໃຈບາງສ່ວນໃນການອຸທິດຕົນ. ຈົ່ງຜະເຊີນໜ້າກັບຄວາມເປັນຈິງໃນເວລາເວົ້າ ແລະ ບໍ່ໃຫ້ໝົກມຸ້ນກັບຄຳເວົ້າທີ່ບໍ່ມີຄວາມເປັນຈິງ ແລະ ເວົ້າເກີນຄວາມຈິງເພື່ອເຮັດໃຫ້ຜູ້ຄົນຮູ້ສຶກສະບາຍໃຈ ຫຼື ຍືນຂຶ້ນ ແລະ ໃຫ້ຄວາມສຳຄັນຕໍ່ເຈົ້າ. ມັນມີຄ່າຢູ່ບ່ອນໃດ? ມັນມີຜົນປະໂຫຍດຫຍັງໃນການເຮັດໃຫ້ຜູ້ຄົນປະຕິບັດຕໍ່ເຈົ້າຢ່າງອົບອຸ່ນແບບນັ້ນ? ຈົ່ງມີ "ມີສິລະປະ" ໃນການປາໄສຂອງເຈົ້າ, ຈົ່ງປະພຶດຕົນຢ່າງຍຸຕິທຳຫຼາຍຂຶ້ນ, ຈົ່ງມີເຫດຜົນຫຼາຍຂຶ້ນໃນວິທີທາງທີ່ເຈົ້າຈັດການສິ່ງຕ່າງໆ, ໃຫ້ເວົ້າໃນສິ່ງທີ່ເປັນຈິງຫຼາຍຂຶ້ນ; ໃຫ້ຄິດໃສ່ການນຳຜົນປະໂຫຍດມາສູ່ຄົວເຮືອນຂອງພຣະເຈົ້າໃນທຸກການກະທຳຂອງເຈົ້າ, ໃຫ້ຟັງຄວາມສຳນຶກຂອງເຈົ້າເອງເມື່ອເຈົ້າມີອາລົມປັ່ນປ່ວນ, ຢ່າຕອບແທນຄວາມເມດຕາດ້ວຍຄວາມກຽດຊັງ ຫຼື ອົກກະຕັນຍູຕໍ່ຄວາມເມດຕາ ແລະ ຢ່າເປັນຄົນໜ້າຊື່ໃຈຄົດ ເພື່ອບໍ່ໃຫ້ເຈົ້າມີອິດທິພົນທີ່ບໍ່ດີ. ເມື່ອເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ໃຫ້ເຊື່ອມໂຍງສິ່ງເຫຼົ່ານັ້ນເຂົ້າໃກ້ກັບຄວາມເປັນຈິງຍິ່ງຂຶ້ນ ແລະ ເມື່ອເຈົ້າສົນທະນາ ກໍຂໍໃຫ້ເວົ້າກ່ຽວກັບສິ່ງທີ່ເປັນຈິງຫຼາຍຂຶ້ນ. ຢ່າຍົກສູງຕົວເອງ; ສິ່ງນີ້ຈະບໍ່ເຮັດໃຫ້ພຣະເຈົ້າ

ພໍໃຈ. ໃນການພົວພັນກັບຄົນອື່ນ, ໃຫ້ອົດທົນກວ່າເກົ່າ, ໃຫ້ອ່ອນໂຍນກວ່າເກົ່າ, ໃຫ້ມີໃຈເອື້ອເຟື້ອເພື່ອແຜ່ຫຼາຍຂຶ້ນ ແລະ ໃຫ້ຮຽນຮູ້ຈາກ "ຈິດໃຈຂອງນາຍົກລັດຖະມົນຕີ"[ກ]. ເມື່ອເຈົ້າມີຄວາມຄິດທີ່ບໍ່ດີກໍຂໍໃຫ້ປະຖິ້ມເນື້ອໜັງຫຼາຍກວ່າເກົ່າ. ເມື່ອເຈົ້າກຳລັງເຮັດວຽກ, ໃຫ້ເວົ້າເຖິງເສັ້ນທາງທີ່ເປັນຈິງຫຼາຍຂຶ້ນ ແລະ ບໍ່ໃຫ້ຖືຕົນເອງສູງສົ່ງເກີນໄປ ຫຼື ບໍ່ສະນັ້ນ ຄຳເວົ້າຂອງເຈົ້າກໍຈະເຮັດໃຫ້ຄົນອື່ນເຂົ້າໃຈຍາກ. ມ່ວນຊື່ນໃຫ້ໜ້ອຍລົງ, ປະກອບສ່ວນໃຫ້ຫຼາຍຂຶ້ນ ເພື່ອສະແດງໃຫ້ເຫັນຈິດໃຈອັນເສຍສະຫຼະແຫ່ງການອຸທິດຕົນຂອງເຈົ້າ. ໃຫ້ຄຳນຶງເຖິງເຈດຕະນາຂອງພຣະເຈົ້າ, ເຊື່ອຟັງຈິດສຳນຶກຂອງເຈົ້າຫຼາຍຂຶ້ນ, ໃຫ້ໃສ່ໃຈຫຼາຍຂຶ້ນ, ຈົ່ງຢ່າລືມວິທີທີ່ພຣະເຈົ້າເວົ້າກັບພວກເຈົ້າຢ່າງອົດທົນ ແລະ ຢ່າງຈິງຈັງໃນທຸກໆມື້. ໃຫ້ອ່ານ "ປະຕິທິນສະບັບເກົ່າ" ຫຼາຍຂຶ້ນກວ່າເກົ່າ. ໃຫ້ອະທິຖານຫຼາຍກວ່າເກົ່າ ແລະ ສົນທະນາເປັນປະຈຳຫຼາຍກວ່າເກົ່າ. ຢຸດສັບສົນ; ສະແດງຄວາມຮູ້ສຶກ ແລະ ຮັບຄວາມເຂົ້າໃຈບາງຢ່າງ. ເມື່ອມືທີ່ຜິດບາບຂອງເຈົ້າຍື່ນອອກໄປ, ກໍໃຫ້ດຶງມັນກັບຄືນມາ; ບໍ່ໃຫ້ມັນຍື່ນອອກໄປໄກຫຼາຍ. ມັນບໍ່ມີປະໂຫຍດ ແລະ ສິ່ງທີ່ເຈົ້າໄດ້ຮັບຈາກພຣະເຈົ້າຈະບໍ່ມີຫຍັງ ນອກຈາກຄຳສາບແຊ່ງ; ດັ່ງນັ້ນ ຈົ່ງໃຫ້ລະວັງ. ຈົ່ງໃຫ້ຫົວໃຈຂອງເຈົ້າມີເມດຕາຕໍ່ຜູ້ອື່ນ ແລະ ບໍ່ໃຫ້ຕົບຕີດ້ວຍອາວຸດຢູ່ໃນມືສະເໝີ. ໃຫ້ສົນທະນາກ່ຽວກັບຄວາມຮູ້ດ້ານຄວາມຈິງໃຫ້ຫຼາຍຍິ່ງຂຶ້ນ ແລະ ເວົ້າກ່ຽວກັບຊີວິດໃຫ້ຫຼາຍກວ່າເກົ່າ ໂດຍຮັກສານໍ້າໃຈໃນການຊ່ວຍເຫຼືອຜູ້ອື່ນ. ໃຫ້ເຮັດຫຼາຍຂຶ້ນ ແລະ ເວົ້າໜ້ອຍລົງ. ໃຫ້ປະຕິບັດຫຼາຍຂຶ້ນ ແລະ ຄົ້ນຄວ້າ ແລະ ວິເຄາະໜ້ອຍລົງ. ໃຫ້ພຣະວິນຍານບໍລິສຸດປຸກໃຈຕົວເຈົ້າຫຼາຍຂຶ້ນ ແລະ ໃຫ້ໂອກາດກັບພຣະເຈົ້າເພື່ອເຮັດໃຫ້ເຈົ້າສົມບູນ. ກຳຈັດອົງປະກອບຂອງມະນຸດໃຫ້ຫຼາຍຂຶ້ນ; ເຈົ້າຍັງມີວິທີທາງປະຕິບັດສິ່ງຕ່າງໆແບບມະນຸດຫຼາຍຢູ່ ແລະ ວິທີການປະຕິບັດສິ່ງຕ່າງໆແບບຜິວເຜີນ ແລະ ພຶດຕິກຳຂອງເຈົ້າຍັງເປັນສິ່ງທີ່ຜູ້ອື່ນລັງກຽດຢູ່: ຈົ່ງກຳຈັດສິ່ງເຫຼົ່ານີ້ໃຫ້ຫຼາຍຂຶ້ນ. ສະພາບທາງຈິດໃຈຂອງເຈົ້າຍັງເປັນຕາຊັງຫຼາຍຢູ່; ໃຊ້ເວລາໃຫ້ຫຼາຍຂຶ້ນໃນການແກ້ໄຂມັນ. ເຈົ້າຍັງໃຫ້ສະຖານະກັບຜູ້ຄົນຫຼາຍເກີນໄປ; ຈົ່ງໃຫ້ສະຖານະກັບພຣະເຈົ້າຫຼາຍຂຶ້ນ ແລະ ຢ່າເປັນຄົນທີ່ຂາດເຫດຜົນ. "ວິຫານ" ເປັນຂອງພຣະເຈົ້າມາແຕ່ຕົ້ນ ແລະ ຜູ້ຄົນບໍ່ຄວນເຂົ້າໄປຄອບຄອງ. ສະຫຼຸບກໍຄື ໃຫ້ຕັ້ງໃຈກັບຄວາມຊອບທຳຫຼາຍຂຶ້ນ ແລະ ໃຊ້ອາລົມໜ້ອຍລົງ. ມັນຈະດີທີ່ສຸດຖ້າເຈົ້າກຳຈັດເນື້ອໜັງ; ສົນທະນາໃຫ້ຫຼາຍຂຶ້ນກ່ຽວກັບຄວາມເປັນຈິງ ແລະ ໃຫ້ເວົ້າໜ້ອຍລົງກ່ຽວກັບຄວາມຮູ້; ມັນຈະດີທີ່ສຸດຖ້າເຈົ້າມິດງຽບ ແລະ ບໍ່ເວົ້າຫຍັງເລີຍ, ໃຫ້ເວົ້າກ່ຽວກັບເສັ້ນທາງຂອງການປະຕິບັດໃຫ້ຫຼາຍຂຶ້ນ ແລະ ໃຫ້ລົດຄວາມໂອ້ອວດທີ່ບໍ່ມີຄ່ານັ້ນລົງ ແລະ ມັນຈະດີທີ່ສຸດຖ້າເຈົ້າເລີ່ມປະຕິບັດແຕ່ດຽວນີ້ເລີຍ.

ເງື່ອນໄຂຂອງພຣະເຈົ້າທີ່ມີຕໍ່ຜູ້ຄົນແມ່ນບໍ່ສູງປານນັ້ນ. ຕາບໃດທີ່ຜູ້ຄົນປະຕິບັດຢ່າງດຸໝັ່ນ ແລະ ຢ່າງຈິງໃຈ, ພວກເຂົາຈະໄດ້ຮັບ "ຄະແນນຜ່ານ". ຄວາມຈິງທີ່ຈະເວົ້າເຖິງກໍຄື ການບັນລຸຄວາມເຂົ້າໃຈ, ຄວາມຮູ້ ແລະ ການຢັ່ງເຖິງຄວາມຈິງເປັນສິ່ງທີ່ຊັບຊ້ອນຫຼາຍກວ່າການປະຕິບັດຄວາມຈິງ. ກ່ອນອື່ນ

ກ ຈິດໃຈຂອງນາຍົກລັດຖະມົນຕີ: ເປັນສຸພາສິດດັ່ງເດີມຂອງປະເທດຈີນທີ່ໃຊ້ໃນການພັນລະນາເຖິງຜູ້ຄົນທີ່ມີຈິດໃຈກວ້າງຂວາງ ແລະ ເອື້ອເຟື້ອເພື່ອແຜ່.

ແມ່ນໃຫ້ປະຕິບັດຫຼາຍເທົ່າທີ່ເຈົ້າເຂົ້າໃຈ ແລະ ປະຕິບັດສິ່ງທີ່ເຈົ້າຢັ່ງເຖິງ. ດ້ວຍວິທີນີ້, ເຈົ້າຈະສາມາດບັນລຸຄວາມຮູ້ທີ່ແທ້ຈິງ ແລະ ຢັ່ງເຖິງຄວາມຈິງເທື່ອລະໜ້ອຍ. ສິ່ງເຫຼົ່ານີ້ແມ່ນບາດກ້າວ ແລະ ວິທີການທີ່ພຣະວິນຍານບໍລິສຸດເຮັດພາລະກິດ. ຖ້າເຈົ້າບໍ່ປະຕິບັດຄວາມເຊື່ອຟັງດ້ວຍວິທີນີ້, ເຈົ້າຈະບໍ່ບັນລຸຫຍັງເລີຍ. ຖ້າເຈົ້າເຮັດຕາມຄວາມປາຖະໜາຂອງເຈົ້າເອງຢູ່ສະເໝີ ແລະ ບໍ່ປະຕິບັດຄວາມເຊື່ອຟັງ, ພຣະວິນຍານບໍລິສຸດຈະເຮັດພາລະກິດພາຍໃນເຈົ້າບໍ? ພຣະວິນຍານບໍລິສຸດເຮັດພາລະກິດຕາມທີ່ເຈົ້າປາຖະໜາບໍ? ຫຼື ພຣະອົງເຮັດພາລະກິດຕາມສິ່ງທີ່ເຈົ້າຂາດ ແລະ ບົນພື້ນຖານພຣະທຳຂອງພຣະເຈົ້າ? ຖ້າສິ່ງນີ້ບໍ່ຊັດເຈນສຳລັບເຈົ້າ, ເຈົ້າຈະບໍ່ສາມາດເຂົ້າສູ່ຄວາມເປັນຈິງຂອງຄວາມຈິງ. ເປັນຫຍັງຄົນສ່ວນໃຫຍ່ຈຶ່ງພະຍາຍາມອ່ານພຣະທຳຂອງພຣະເຈົ້າ, ມີພຽງແຕ່ຄວາມຮູ້ ແລະ ສຸດທ້າຍກໍບໍ່ສາມາດເວົ້າສິ່ງໃດໄດ້ເລີຍກ່ຽວກັບເສັ້ນທາງທີ່ແທ້ຈິງ? ເຈົ້າຄິດວ່າການມີຄວາມຮູ້ຈະທຽບເທົ່າກັບການມີຄວາມຈິງບໍ? ນັ້ນບໍ່ແມ່ນມຸມມອງທີ່ສັບສົນບໍ? ເຈົ້າສາມາດເວົ້າກ່ຽວກັບຄວາມຮູ້ຫຼາຍຢ່າງເທົ່າກັບເມັດດິນຊາຍຢູ່ຫາດຊາຍ ແຕ່ທຸກສິ່ງໃນນັ້ນແມ່ນບໍ່ມີເສັ້ນທາງທີ່ແທ້ຈິງ. ການເຮັດແບບນັ້ນ, ເຈົ້າບໍ່ໄດ້ຫຼອກລວງຜູ້ຄົນບໍ? ເຈົ້າບໍ່ແມ່ນກຳລັງເຮັດການສະແດງທີ່ວ່າງເປົ່າ ໂດຍບໍ່ມີເນື້ອຫາຫຍັງມາສະໜັບສະໜູນບໍ? ພຶດຕິກຳທັງໝົດທີ່ກ່າວມານັ້ນເປັນໄພຕໍ່ຜູ້ຄົນ! ຍິ່ງທິດສະດີສູງສໍ່າໃດ ແລະ ຍິ່ງມັນປາສະຈາກຄວາມເປັນຈິງຫຼາຍສໍ່າໃດ, ມັນກໍຍິ່ງບໍ່ສາມາດນຳເອົາຜູ້ຄົນເຂົ້າໄປສູ່ຄວາມເປັນຈິງໄດ້ສໍ່ານັ້ນ. ຍິ່ງທິດສະດີສູງສົ່ງສໍ່າໃດ, ມັນຍິ່ງເຮັດໃຫ້ເຈົ້າຂັດຂືນ ແລະ ຕໍ່ຕ້ານພຣະເຈົ້າ. ຢ່າປົກປ້ອງທິດສະດີຝ່າຍວິນຍານຫຼາຍເກີນໄປ, ມັນບໍ່ມີປະໂຫຍດຫຍັງ! ບາງຄົນກຳລັງເວົ້າກ່ຽວກັບທິດສະດີຝ່າຍວິນຍານເປັນເວລາຫຼາຍທົດສະວັດ ແລະ ພວກເຂົາໄດ້ກາຍມາເປັນຍັກໃນຄວາມເຊື່ອຜີ, ແຕ່ໃນທີ່ສຸດແລ້ວ ພວກເຂົາກໍຍັງບໍ່ສາມາດເຂົ້າສູ່ຄວາມເປັນຈິງຂອງຄວາມຈິງ. ເພາະພວກເຂົາບໍ່ໄດ້ປະຕິບັດ ຫຼື ມີປະສົບການກັບພຣະທຳຂອງພຣະເຈົ້າ, ພວກເຂົາຈຶ່ງບໍ່ມີຫຼັກການ ຫຼື ເສັ້ນທາງໃຫ້ປະຕິບັດ. ຜູ້ຄົນແບບນີ້ຂາດຄວາມເປັນຈິງຂອງຄວາມຈິງ, ສະນັ້ນ ພວກເຂົາຈະສາມາດນຳຄົນອື່ນມາສູ່ເສັ້ນທາງຄວາມເຊື່ອທີ່ຖືກຕ້ອງໃນພຣະເຈົ້າໄດ້ແນວໃດ? ພວກເຂົາພຽງແຕ່ສາມາດພາໃຫ້ຜູ້ຄົນຫຼົງທາງເທົ່ານັ້ນ. ນີ້ບໍ່ແມ່ນການທຳຮ້າຍຄົນອື່ນ ແລະ ຕົນເອງບໍ? ຢ່າງໜ້ອຍທີ່ສຸດ, ເຈົ້າຕ້ອງສາມາດແກ້ໄຂບັນຫາທີ່ແທ້ຈິງທີ່ຢູ່ຕໍ່ໜ້າເຈົ້າ. ນັ້ນໝາຍຄວາມວ່າ ເຈົ້າຕ້ອງສາມາດປະຕິບັດ ແລະ ມີປະສົບການກັບພຣະທຳຂອງພຣະເຈົ້າ ແລະ ນຳຄວາມຈິງເຂົ້າສູ່ການປະຕິບັດ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນຄວາມເຊື່ອຟັງພຣະເຈົ້າ. ມີແຕ່ເມື່ອເຈົ້າໄດ້ເຂົ້າສູ່ຊີວິດເທົ່ານັ້ນ, ເຈົ້າຈຶ່ງມີຄຸນສົມບັດທີ່ຈະເຮັດວຽກໃຫ້ກັບພຣະເຈົ້າ ແລະ ມີແຕ່ເມື່ອເຈົ້າເສຍສະຫຼະໃຫ້ກັບພຣະເຈົ້າຢ່າງຈິງໃຈເທົ່ານັ້ນ, ເຈົ້າຈຶ່ງຈະຖືກຮອງຮັບໂດຍພຣະເຈົ້າ. ຢ່າເວົ້າໃຫຍ່ ແລະ ເວົ້າເຖິງທິດສະດີທີ່ໂອ້ອວດຢູ່ສະເໝີ; ນີ້ຄືສິ່ງທີ່ບໍ່ມີຈິງ. ການເທດສະໜາກ່ຽວກັບທິດສະດີຝ່າຍວິນຍານເພື່ອເຮັດໃຫ້ຜູ້ຄົນເທີດທູນເຈົ້າບໍ່ແມ່ນການເປັນພະຍານໃຫ້ກັບພຣະເຈົ້າ, ແຕ່ກົງກັນຂ້າມ ມັນຄືການໂອ້ອວດຕົນເອງ. ມັນບໍ່ໄດ້ເປັນປະໂຫຍດຫຍັງຕໍ່ຜູ້ຄົນແທ້ໆ ແລະ ບໍ່ໄດ້ອົບຮົມພວກເຂົາ ແລະ ສາມາດພາພວກເຂົາໃຫ້ນະມັດສະການທິດສະດີຝ່າຍວິນຍານຢ່າງງ່າຍດາຍ ແລະ ບໍ່ເອົາໃຈໃສ່ໃນການປະຕິບັດຄວາມຈິງ, ແລ້ວນີ້ບໍ່ແມ່ນການພາໃຫ້ຜູ້ຄົນຫຼົງທາງບໍ?

ການເຮັດແບບນີ້ຈະກໍ່ໃຫ້ເກີດທິດສະດີ ແລະ ກົດລະບຽບທີ່ວ່າງເປົ່າຫຼາຍຢ່າງ ເຊິ່ງຈະຈຳກັດ ແລະ ສ້າງກັບດັກໃຫ້ແກ່ຜູ້ຄົນ; ມັນເປັນຕາອັບອາຍແທ້ໆ. ສະນັ້ນ ໃຫ້ເວົ້າສິ່ງທີ່ເປັນຈິງຫຼາຍຂຶ້ນ, ເວົ້າກ່ຽວກັບບັນຫາທີ່ມີຢູ່ຈິງໃຫ້ຫຼາຍຂຶ້ນ, ໃຊ້ເວລາຫຼາຍຂຶ້ນໃນການຄົ້ນຫາຄວາມຈິງເພື່ອແກ້ໄຂບັນຫາທີ່ແທ້ຈິງ; ນີ້ແມ່ນສິ່ງທີ່ສຳຄັນທີ່ສຸດ. ຢ່າຊັກຊ້າໃນການຮຽນຮູ້ເພື່ອປະຕິບັດຄວາມຈິງ: ນີ້ຄືເສັ້ນທາງຂອງການເຂົ້າສູ່ຄວາມເປັນຈິງ. ຢ່າຮັບເອົາປະສົບການ ແລະ ຄວາມຮູ້ຂອງຄົນອື່ນມາເປັນຊັບສິນສ່ວນຕົວຂອງເຈົ້າເອງ ແລະ ເຊີດຊູພວກມັນເພື່ອໃຫ້ຄົນອື່ນໄດ້ເທີດທູນ. ເຈົ້າຕ້ອງມີທາງເຂົ້າສູ່ຊີວິດຂອງເຈົ້າເອງ. ໂດຍການປະຕິບັດຄວາມຈິງ ແລະ ການເຊື່ອຟັງພຣະເຈົ້າເທົ່ານັ້ນ, ເຈົ້າຈຶ່ງຈະມີທາງເຂົ້າສູ່ຊີວິດ. ສິ່ງນີ້ຄວນເປັນສິ່ງທີ່ທຸກຄົນປະຕິບັດ ແລະ ໃຫ້ຄວາມສົນໃຈ.

ຖ້າສິ່ງທີ່ເຈົ້າສົນທະນາສາມາດມອບເສັ້ນທາງໃຫ້ຜູ້ຄົນຢ່າງໄດ້ ນັ້ນກໍທຽບເທົ່າກັບຄວາມເປັນຈິງທີ່ເຈົ້າມີແລ້ວ. ບໍ່ວ່າເຈົ້າຈະເວົ້າຫຍັງ, ເຈົ້າຕ້ອງນຳເອົາຜູ້ຄົນມາສູ່ການປະຕິບັດ ແລະ ມອບເສັ້ນທາງໃຫ້ພວກເຂົາທັງໝົດເພື່ອພວກເຂົາຈະສາມາດຍ່າງຕາມ. ຢ່າເຮັດສິ່ງນັ້ນເພື່ອໃຫ້ຄົນມີຄວາມຮູ້ເທົ່ານັ້ນ ແຕ່ທີ່ສຳຄັນຄືການມີເສັ້ນທາງທີ່ຈະຍ່າງ. ສຳລັບຄົນທີ່ຈະເຊື່ອໃນພຣະເຈົ້າ, ພວກເຂົາຕ້ອງຍ່າງເທິງເສັ້ນທາງທີ່ນຳພາໂດຍພຣະເຈົ້າໃນພາລະກິດຂອງພຣະອົງ. ນັ້ນກໍຄືຂະບວນການແຫ່ງການເຊື່ອໃນພຣະເຈົ້າ ແມ່ນຂະບວນການໃນການຍ່າງຕາມເສັ້ນທາງທີ່ນຳພາໂດຍພຣະວິນຍານບໍລິສຸດ. ດ້ວຍເຫດນັ້ນບໍ່ວ່າຫຍັງກໍຕາມເຈົ້າຕ້ອງມີເສັ້ນທາງທີ່ເຈົ້າສາມາດຍ່າງ ແລະ ເຈົ້າຕ້ອງຍ່າງຢູ່ເສັ້ນທາງແຫ່ງການຖືກພຣະເຈົ້າເຮັດໃຫ້ສົມບູນ. ຢ່າຕົກໄປຢູ່ຂ້າງຫຼັງຫຼາຍ ແລະ ຢ່າສົນໃຈຕົນເອງກັບຫຼາຍສິ່ງເກີນໄປ. ຖ້າເຈົ້າຍ່າງຢູ່ເສັ້ນທາງທີ່ນຳພາໂດຍພຣະເຈົ້າໂດຍບໍ່ມີການລົບກວນ, ເຈົ້າກໍຈະສາມາດໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ມີເສັ້ນທາງເຂົ້າສູ່ຄວາມເປັນຈິງ. ມີແຕ່ສິ່ງນີ້ເທົ່ານັ້ນທີ່ສາມາດນັບໄດ້ວ່າສອດຄ່ອງກັບເຈດຕະນາຂອງພຣະເຈົ້າ ແລະ ເປັນການເຮັດໜ້າທີ່ຂອງມະນຸດໃຫ້ສຳເລັດ. ໃນຖານະທີ່ເປັນຄົນໜຶ່ງໃນກະແສດັ່ງກ່າວນີ້, ແຕ່ລະຄົນຄວນເຮັດໜ້າທີ່ຂອງພວກເຂົາໃຫ້ສຳເລັດຢ່າງເໝາະສົມ, ເຮັດໃນສິ່ງທີ່ຄົນຄວນເຮັດໃຫ້ຫຼາຍຂຶ້ນ ແລະ ບໍ່ໃຫ້ປະຕິບັດຢ່າງຫົວແຂງ. ຄົນທີ່ປະຕິບັດພາລະກິດຕ້ອງເຮັດໃຫ້ຄຳເວົ້າຂອງພວກເຂົາຊັດເຈນ, ຄົນທີ່ຕິດຕາມຕ້ອງໃສ່ໃຈກັບການອົດທົນຕໍ່ຄວາມລຳບາກ ແລະ ການເຊື່ອຟັງໃຫ້ຫຼາຍຂຶ້ນ ແລະ ທຸກຄົນຕ້ອງຢູ່ບ່ອນຂອງພວກເຂົາ ແລະ ບໍ່ໃຫ້ອອກນອກຂອບເຂດ. ໃນໃຈຂອງທຸກຄົນຕ້ອງຊັດເຈນກ່ຽວກັບວິທີທີ່ພວກເຂົາຄວນປະຕິບັດ ແລະ ໜ້າທີ່ໆພວກເຂົາຄວນເຮັດໃຫ້ສຳເລັດ. ໃຫ້ເລືອກເສັ້ນທາງທີ່ນຳພາໂດຍພຣະວິນຍານບໍລິສຸດ; ບໍ່ໃຫ້ຫຼົງທາງ ຫຼື ເຮັດໃນສິ່ງທີ່ຜິດ. ເຈົ້າຕ້ອງເຫັນພາລະກິດໃນປັດຈຸບັນໃຫ້ຊັດເຈນ. ການເຂົ້າສູ່ວິທີການປະຕິບັດພາລະກິດໃນປັດຈຸບັນຄືສິ່ງທີ່ພວກເຈົ້າຄວນປະຕິບັດ. ມັນແມ່ນສິ່ງທຳອິດທີ່ພວກເຈົ້າຕ້ອງເຂົ້າສູ່. ຈົ່ງຢ່າໃຊ້ຄຳເວົ້າໃຫ້ສິ້ນເປືອງກັບສິ່ງອື່ນໆໄປຫຼາຍກວ່ານີ້. ການເຮັດພາລະກິດແຫ່ງຄົວເຮືອນຂອງພຣະເຈົ້າໃນປັດຈຸບັນແມ່ນຄວາມຮັບຜິດຊອບຂອງພວກເຈົ້າ, ການເຂົ້າສູ່ວິທີການປະຕິບັດພາລະກິດໃນປັດຈຸບັນແມ່ນໜ້າທີ່ຂອງພວກເຈົ້າ ແລະ ການປະຕິບັດຄວາມຈິງໃນປັດຈຸບັນກໍແມ່ນພາລະຂອງພວກເຈົ້າ.

# ການຮັກສາພຣະບັນຍັດ ແລະ ການປະຕິບັດຄວາມຈິງ

ໃນທາງປະຕິບັດ, ການຮັກສາພຣະບັນຍັດຄວນເຊື່ອມໂຍງກັບການນຳຄວາມຈິງເຂົ້າສູ່ການປະຕິບັດ. ໃນຂະນະທີ່ກຳລັງຮັກສາພຣະບັນຍັດ, ຄົນໆໜຶ່ງຕ້ອງປະຕິບັດຄວາມຈິງ. ເມື່ອກຳລັງປະຕິບັດຄວາມຈິງ, ຄົນໆໜຶ່ງຕ້ອງບໍ່ລະເມີດຫຼັກການແຫ່ງພຣະບັນຍັດ ຫຼື ຂັດກັບພຣະບັນຍັດ; ເຈົ້າຕ້ອງເຮັດແມ່ນຫຍັງກໍ່ຕາມທີ່ພຣະເຈົ້າຮຽກຮ້ອງຈາກເຈົ້າ. ການຮັກສາພຣະບັນຍັດ ແລະ ການປະຕິບັດຄວາມຈິງແມ່ນກ່ຽວພັນກັນ, ບໍ່ໄດ້ຂັດຈາກກັນ. ຍິ່ງເຈົ້າປະຕິບັດຄວາມຈິງຫຼາຍສໍ່າໃດ, ເຈົ້າກໍ່ຍິ່ງຮັກສາແກ່ນແທ້ຂອງພຣະບັນຍັດຫຼາຍສໍ່ານັ້ນ. ຍິ່ງເຈົ້າປະຕິບັດຄວາມຈິງຫຼາຍສໍ່າໃດ, ເຈົ້າກໍ່ຍິ່ງເຂົ້າໃຈພຣະທຳຂອງພຣະເຈົ້າທີ່ກ່າວອອກໃນພຣະບັນຍັດຫຼາຍສໍ່ານັ້ນ. ການປະຕິບັດຄວາມຈິງ ແລະ ການຮັກສາພຣະບັນຍັດບໍ່ແມ່ນການກະທຳທີ່ຂັດກັນ, ພວກມັນເປັນສິ່ງທີ່ກ່ຽວພັນກັນ. ໃນເບື້ອງຕົ້ນນັ້ນ, ພຽງຫຼັງຈາກທີ່ມະນຸດໄດ້ຮັກສາພຣະບັນຍັດເທົ່ານັ້ນ ເຂົາຈຶ່ງສາມາດປະຕິບັດຄວາມຈິງ ແລະ ໄດ້ຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດໄດ້, ແຕ່ສິ່ງນີ້ບໍ່ແມ່ນເຈດຕະນາເດີມຂອງພຣະເຈົ້າ. ພຣະເຈົ້າຮຽກຮ້ອງໃຫ້ເຈົ້ານະມັດສະການພຣະອົງດ້ວຍຫົວໃຈ, ບໍ່ແມ່ນພຽງແຕ່ປະພຶດດີຢ່າງດຽວ. ເຖິງຢ່າງໃດກໍ່ຕາມ, ເຈົ້າຕ້ອງຮັກສາພຣະບັນຍັດຢ່າງໜ້ອຍໃຫ້ຢູ່ໃນລະດັບຜິວເຜີນ. ຜ່ານປະສົບການເທື່ອລະໜ້ອຍຫຼັງຈາກທີ່ໄດ້ຮັບຄວາມເຂົ້າໃຈທີ່ຊັດເຈນຂຶ້ນກ່ຽວກັບພຣະເຈົ້າ, ຜູ້ຄົນກໍ່ຈະເຊົາກະບົດ ແລະ ເຊົາຕໍ່ຕ້ານພຣະອົງ ແລະ ຈະບໍ່ມີຂໍ້ສົງໄສກ່ຽວກັບພາລະກິດຂອງພຣະອົງອີກຕໍ່ໄປ. ນີ້ຄືຫົນທາງດຽວທີ່ມະນຸດສາມາດປະຕິບັດຕາມແກ່ນແທ້ຂອງພຣະບັນຍັດ. ສະນັ້ນ, ການພຽງແຕ່ຮັກສາພຣະບັນຍັດຢ່າງດຽວໂດຍບໍ່ມີການປະຕິບັດຄວາມຈິງແມ່ນບໍ່ມີປະສິດທິພາບ ແລະ ບໍ່ໄດ້ປະກອບເປັນການນະມັດສະການພຣະເຈົ້າຢ່າງແທ້ຈິງ, ຍ້ອນເຈົ້າຍັງບໍ່ໄດ້ບັນລຸວຸດທິພາວະທີ່ແທ້ຈິງເທື່ອ. ການຮັກສາພຣະບັນຍັດໂດຍປາສະຈາກຄວາມຈິງກໍ່ເທົ່າກັບການຍຶດຕິດກົດລະບຽບຢ່າງໜຽວແໜ້ນ. ໃນການເຮັດແບບນັ້ນ, ພຣະບັນຍັດກໍ່ຈະກາຍມາເປັນກົດໝາຍຂອງເຈົ້າ ເຊິ່ງຈະບໍ່ຊ່ວຍໃຫ້ເຈົ້າເຕີບໃຫຍ່ໃນຊີວິດ. ໃນທາງກົງກັນຂ້າມ, ພວກມັນຈະກາຍມາເປັນພາລະຂອງເຈົ້າ ແລະ ຜູກມັດເຈົ້າຢ່າງແໜ້ນເໜືອນກັບກົດໝາຍໃນພຣະສັນຍາເດີມ ເຊິ່ງເຮັດໃຫ້ເຈົ້າສູນເສຍການສະຖິດຂອງພຣະວິນຍານບໍລິສຸດ. ສະນັ້ນ, ໂດຍການປະຕິບັດຄວາມຈິງເທົ່ານັ້ນ ເຈົ້າຈຶ່ງສາມາດຮັກສາພຣະບັນຍັດໄດ້ຢ່າງມີປະສິດທິພາບ ແລະ ເຈົ້າກໍ່ຈະຮັກສາພຣະບັນຍັດເພື່ອປະຕິບັດຄວາມຈິງໄດ້. ໃນຂະບວນການຮັກສາພຣະບັນຍັດ, ເຈົ້າຈະນຳຄວາມຈິງຫຼາຍຂຶ້ນເຂົ້າສູ່ການປະຕິບັດ ແລະ ເມື່ອກຳລັງປະຕິບັດຄວາມຈິງ ເຈົ້າຈະໄດ້ຮັບຄວາມເຂົ້າໃຈຫຼາຍຍິ່ງຂຶ້ນກ່ຽວກັບຄວາມໝາຍທີ່ແທ້ຈິງຂອງພຣະບັນຍັດ. ເປົ້າໝາຍ ແລະ ຄວາມໝາຍທີ່ຢູ່ເບື້ອງຫຼັງການຮຽກຮ້ອງຂອງພຣະເຈົ້າທີ່ມະນຸດຕ້ອງຮັກສາພຣະບັນຍັດບໍ່ແມ່ນເພື່ອເຮັດໃຫ້ເຂົາປະຕິບັດຕາມກົດລະບຽບດັ່ງທີ່ເຂົາຈິນຕະນາການ; ກົງກັນຂ້າມ, ມັນກ່ຽວຂ້ອງກັບທາງເຂົ້າສູ່ຊີວິດຂອງເຂົາ. ຂອບເຂດການເຕີບໃຫຍ່ໃນຊີວິດຂອງເຈົ້າກຳນົດລະດັບທີ່ເຈົ້າຈະສາມາດຮັກສາພຣະບັນຍັດ. ເຖິງແມ່ນວ່າພຣະບັນຍັດມີໄວ້ໃຫ້ມະນຸດຮັກສາ, ແກ່ນແທ້ຂອງພຣະບັນຍັດພຽງແຕ່ຊັດແຈ້ງຂຶ້ນຜ່ານ

ປະສົບການຊີວິດຂອງມະນຸດ. ຄົນສ່ວນໃຫຍ່ສັນນິດຖານວ່າການຮັກສາພຣະບັນຍັດເປັນຢ່າງດີໝາຍຄວາມວ່າ ພວກເຂົາ "ກຽມພ້ອມໝົດແລ້ວ ແລະ ສິ່ງທີ່ຍັງເຫຼືອໃຫ້ເຮັດກໍ່ຄືຕ້ອງຕາມໃຫ້ທັນ". ສິ່ງນີ້ແມ່ນແນວຄິດປະເພດທີ່ເກີນຂອບເຂດ ແລະ ບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ຄົນທີ່ເວົ້າສິ່ງດັ່ງກ່າວບໍ່ປາຖະໜາທີ່ຈະກ້າວໜ້າ ແລະ ພວກເຂົາປາຖະໜາທາງເນື້ອໜັງ. ມັນເປັນເລື່ອງໄຮ້ສາລະ! ມັນບໍ່ສອດຄ່ອງກັບຄວາມເປັນຈິງເລີຍ! ມັນບໍ່ແມ່ນຄວາມປະສົງຂອງພຣະເຈົ້າທີ່ຈະພຽງແຕ່ປະຕິບັດຄວາມຈິງ ໂດຍປາສະຈາກການຮັກສາພຣະບັນຍັດແທ້ໆ. ຄົນທີ່ເຮັດແບບນີ້ແມ່ນຄົນພິການ; ພວກເຂົາຄືກັບຄົນທີ່ຂາດຂາຂ້າງໜຶ່ງ. ການຮັກສາພຣະບັນຍັດແຕ່ຢ່າງດຽວຄືກັບວ່າປະຕິບັດຕາມກົດລະບຽບ, ແຕ່ບໍ່ມີຄວາມຈິງ, ສິ່ງນີ້ແມ່ນບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າເຊັ່ນກັນ; ຄືກັບຄົນທີ່ຕາບອດເບື້ອງໜຶ່ງ, ຜູ້ຄົນທີ່ເຮັດແບບນີ້ກໍ່ທົນທຸກຈາກຄວາມພິການຮູບແບບໜຶ່ງ. ມັນສາມາດເວົ້າໄດ້ວ່າ ຖ້າເຈົ້າຮັກສາພຣະບັນຍັດເປັນຢ່າງດີ ແລະ ໄດ້ຮັບຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບພຣະເຈົ້າທີ່ເປັນຈິງ, ແລ້ວເຈົ້າກໍ່ຈະມີຄວາມຈິງ; ເວົ້າອີກຢ່າງໜຶ່ງກໍ່ຄື, ເຈົ້າຈະໄດ້ຮັບວຸດທິພາວະທີ່ແທ້ຈິງ. ຖ້າເຈົ້າປະຕິບັດຄວາມຈິງທີ່ເຈົ້າຄວນປະຕິບັດ, ເຈົ້າກໍ່ຈະຍັງຮັກສາພຣະບັນຍັດອີກດ້ວຍ ແລະ ທັງສອງສິ່ງເຫຼົ່ານີ້ແມ່ນບໍ່ໄດ້ຂັດແຍ້ງກັນ. ການປະຕິບັດຄວາມຈິງ ແລະ ການຮັກສາພຣະບັນຍັດແມ່ນສອງລະບົບເຊິ່ງທັງສອງຢ່າງເປັນສ່ວນທີ່ສຳຄັນໃນປະສົບການຊີວິດຂອງຄົນໆໜຶ່ງ. ປະສົບການຂອງຄົນໆໜຶ່ງຄວນປະກອບດ້ວຍການປະສົມປະສານ ບໍ່ແມ່ນການແບ່ງແຍກການຮັກສາພຣະບັນຍັດ ແລະ ການປະຕິບັດຄວາມຈິງອອກຈາກກັນ. ເຖິງຢ່າງໃດກໍ່ຕາມ, ມີທັງຄວາມແຕກຕ່າງ ແລະ ຄວາມເຊື່ອມໂຍງກັນລະຫວ່າງສອງສິ່ງເຫຼົ່ານີ້.

ການປະກາດໃຊ້ພຣະບັນຍັດໃນຍຸກໃໝ່ແມ່ນຄຳພະຍານເຖິງຂໍ້ແທ້ຈິງທີ່ວ່າ ທຸກຄົນທີ່ຢູ່ໃນກະແສນີ້, ທຸກຄົນທີ່ໄດ້ຍິນສຽງຂອງພຣະເຈົ້າໃນປັດຈຸບັນ ໄດ້ເຂົ້າສູ່ຍຸກໃໝ່ແລ້ວ. ນີ້ແມ່ນການເລີ່ມຕົ້ນໃໝ່ສຳລັບພາລະກິດຂອງພຣະເຈົ້າ ພ້ອມທັງເປັນຈຸດເລີ່ມຕົ້ນຂອງສ່ວນສຸດທ້າຍຂອງພາລະກິດໃນແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າ. ພຣະບັນຍັດແຫ່ງຍຸກໃໝ່ເປັນສັນຍາລັກບົ່ງບອກວ່າ ພຣະເຈົ້າ ແລະ ມະນຸດໄດ້ເຂົ້າສູ່ອານາຈັກແຫ່ງສະຫວັນໃໝ່ ແລະ ແຜ່ນດິນໂລກໃໝ່ ແລະ ພຣະເຈົ້າຈະປະຕິບັດພາລະກິດທີ່ເປັນຈິງຫຼາຍຂຶ້ນເຊັ່ນດຽວກັບພຣະເຢໂຮວາທີ່ປະຕິບັດພາລະກິດທ່າມກາງຄົນຍິວ ແລະ ປະຕິບັດພາລະກິດຢ່າງຍິ່ງໃຫຍ່ຂຶ້ນເທິງແຜ່ນດິນໂລກ. ພວກມັນຍັງເປັນສັນຍາລັກບົ່ງບອກວ່າ ຄົນກຸ່ມນີ້ຈະໄດ້ຮັບການຝາກຝັງຫຼາຍຂຶ້ນເລື້ອຍໆຈາກພຣະເຈົ້າ ແລະ ຈະໄດ້ຮັບການສະໜອງ, ການລ້ຽງດູ, ການສະໜັບສະໜູນ, ການດູແລ ແລະ ການປົກປ້ອງຈາກພຣະເຈົ້າໃນລັກສະນະທີ່ເປັນຈິງ, ໄດ້ຮັບການຝຶກຝົນຕົວຈິງຫຼາຍຂຶ້ນຈາກພຣະອົງ ແລະ ຖືກຈັດການ, ຖືກເຮັດໃຫ້ແຕກຫັກ ແລະ ຖືກຫຼໍ່ຫຼອມໂດຍພຣະທຳຂອງພຣະເຈົ້າ. ຄວາມໝາຍຂອງພຣະບັນຍັດແຫ່ງຍຸກໃໝ່ແມ່ນເລິກເຊິ່ງພໍສົມຄວນ. ພຣະບັນຍັດເຫຼົ່ານັ້ນແນະນຳວ່າ ພຣະເຈົ້າຈະປາກົດເທິງແຜ່ນດິນໂລກຢ່າງແທ້ຈິງ, ຈາກຈຸດນັ້ນ ພຣະເຈົ້າຈະເອົາຊະນະຈັກກະວານທັງປວງເທິງ, ເປີດເຜີຍສະຫງ່າລາສີທັງໝົດຂອງພຣະອົງທີ່ຢູ່ໃນເນື້ອໜັງ. ພຣະບັນຍັດເຫຼົ່ານັ້ນຍັງແນະນຳວ່າ ພຣະເຈົ້າທີ່ເປັນຈິງຈະປະຕິບັດ

ພາລະກິດທີ່ເປັນຈິງຫຼາຍຂຶ້ນເທິງແຜ່ນດິນໂລກ ເພື່ອເຮັດໃຫ້ທຸກຄົນທີ່ເປັນຄົນຖືກເລືອກຂອງພຣະອົງສົມບູນ. ຍິ່ງໄປກວ່ານັ້ນ, ພຣະເຈົ້າຈະສຳເລັດທຸກສິ່ງເທິງແຜ່ນດິນໂລກດ້ວຍພຣະທຳ ແລະ ສຳແດງໃຫ້ເຫັນເຖິງພຣະບັນຍັດທີ່ວ່າ "ພຣະເຈົ້າທີ່ບັງເກີດເປັນມະນຸດຈະລຸກຂຶ້ນຈົນເຖິງຈຸດສູງສຸດ ແລະ ຖືກເຊີດຊູ ແລະ ທຸກຄົນ ແລະ ທຸກຊົນຊາດຈະຄຸເຂົ່າລົງເພື່ອນະມັດສະການພຣະເຈົ້າຜູ້ຍິ່ງໃຫຍ່". ເຖິງແມ່ນວ່າພຣະບັນຍັດແຫ່ງຍຸກໃໝ່ແມ່ນມີໄວ້ໃຫ້ມະນຸດຮັກສາ ແລະ ເຖິງແມ່ນການເຮັດແບບນັ້ນຈະເປັນໜ້າທີ່ຂອງມະນຸດ ແລະ ເປັນພັນທະຂອງເຂົາ, ຄວາມໝາຍທີ່ພວກມັນນຳສະເໜີແມ່ນເລິກເຊິ່ງເກີນໄປທີ່ຈະອະທິບາຍໄດ້ຢ່າງຄົບຖ້ວນຈາກຄຳເວົ້າຄຳໜຶ່ງ ຫຼື ສອງຄຳ. ພຣະບັນຍັດແຫ່ງຍຸກໃໝ່ແທນກົດໝາຍແຫ່ງພຣະສັນຍາເດີມ ແລະ ກົດເກນແຫ່ງພຣະສັນຍາໃໝ່ທີ່ພຣະເຢໂຮວາ ແລະ ພຣະເຢຊູໄດ້ປະກາດໃຊ້. ນີ້ແມ່ນບົດຮຽນທີ່ເລິກເຊິ່ງທີ່ສຸດ, ບໍ່ແມ່ນເລື່ອງງ່າຍດັ່ງທີ່ມະນຸດຈິນຕະນາການ. ມີລັກສະນະຄວາມໝາຍຕົວຈິງໃນພຣະບັນຍັດແຫ່ງຍຸກໃໝ່: ພຣະບັນຍັດເຫຼົ່ານັ້ນຮັບໃຊ້ເປັນຕົວປະສານງານລະຫວ່າງຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງລາຊະອານາຈັກ. ພຣະບັນຍັດແຫ່ງຍຸກໃໝ່ໄດ້ສິ້ນສຸດການປະຕິບັດ ແລະ ກົດເກນທັງໝົດໃນຍຸກເກົ່າ ພ້ອມທັງການປະຕິບັດທັງໝົດຈາກຍຸກຂອງພຣະເຢຊູ ແລະ ການປະຕິບັດອື່ນໆຢູ່ກ່ອນໜ້ານັ້ນ. ພຣະບັນຍັດເຫຼົ່ານັ້ນນຳມະນຸດມາຢູ່ຕໍ່ໜ້າພຣະເຈົ້າທີ່ເປັນຈິງຫຼາຍຂຶ້ນ, ເຮັດໃຫ້ມະນຸດເລີ່ມຖືກພຣະເຈົ້າເອງເຮັດໃຫ້ສົມບູນ; ພວກມັນເປັນຈຸດເລີ່ມຕົ້ນຂອງເສັ້ນທາງສູ່ການຖືກເຮັດໃຫ້ສົມບູນ. ສະນັ້ນ, ພວກເຈົ້າຄວນມີທ່າທີ່ງຖືກຕ້ອງກ່ຽວກັບພຣະບັນຍັດແຫ່ງຍຸກໃໝ່ ແລະ ບໍ່ຄວນປະຕິບັດຕາມພຣະບັນຍັດເຫຼົ່ານັ້ນຢ່າງເລີນເລີ້ ຫຼື ດູຖູກພຣະບັນຍັດເຫຼົ່ານັ້ນ. ພຣະບັນຍັດແຫ່ງຍຸກໃໝ່ໄດ້ເໜັ້ນໜັກໃສ່ໜຶ່ງປະເດັນ: ມະນຸດຄວນນະມັດສະການພຣະເຈົ້າທີ່ເປັນຈິງໃນປັດຈຸບັນ ເຊິ່ງກ່ຽວຂ້ອງກັບການຍອມອ່ອນນ້ອມຕໍ່ແກ່ນແທ້ຂອງພຣະວິນຍານຕາມຄວາມເປັນຈິງຫຼາຍຂຶ້ນ. ພຣະບັນຍັດເຫຼົ່ານັ້ນຍັງເໜັ້ນໜັກເຖິງຫຼັກການທີ່ພຣະເຈົ້າຈະຕັດສິນມະນຸດວ່າມີຄວາມຜິດ ຫຼື ເປັນຄົນຊອບທຳ ຫຼັງຈາກທີ່ພຣະອົງໄດ້ປາກົດອອກເປັນດວງອາທິດແຫ່ງຄວາມຊອບທຳ. ພຣະບັນຍັດແມ່ນງ່າຍໃນການເຂົ້າໃຈຫຼາຍກວ່າການນຳໄປປະຕິບັດ. ຈາກສິ່ງນີ້, ມັນສາມາດເຫັນໄດ້ວ່າຖ້າພຣະເຈົ້າປາຖະໜາທີ່ຈະເຮັດໃຫ້ມະນຸດສົມບູນ, ແລ້ວພຣະອົງຕ້ອງກະທຳຜ່ານທາງພຣະທຳ ແລະ ການນຳພາຂອງພຣະອົງເອງ ແລະ ມະນຸດບໍ່ສາມາດບັນລຸຄວາມສົມບູນໂດຍສະຕິປັນຍາໂດຍທຳມະຊາດຂອງເຂົາເອງໄດ້. ມະນຸດຈະສາມາດຮັກສາພຣະບັນຍັດແຫ່ງຍຸກໃໝ່ໄດ້ ຫຼື ບໍ່ ແມ່ນຂຶ້ນຢູ່ກັບຄວາມຮູ້ຂອງມະນຸດທີ່ກ່ຽວກັບພຣະເຈົ້າທີ່ເປັນຈິງ. ເພາະສະນັ້ນ, ການທີ່ເຈົ້າຈະສາມາດຮັກສາພຣະບັນຍັດໄດ້ ຫຼື ບໍ່ນັ້ນບໍ່ແມ່ນຄຳຖາມທີ່ຈະໄດ້ຮັບການແກ້ໄຂພາຍໃນໜຶ່ງມື້ ຫຼື ສອງມື້. ນີ້ແມ່ນບົດຮຽນທີ່ເລິກເຊິ່ງຫຼາຍໃນການຮຽນຮູ້.

ການປະຕິບັດຄວາມຈິງແມ່ນເສັ້ນທາງທີ່ຊີວິດຂອງມະນຸດສາມາດເຕີບໃຫຍ່. ຖ້າພວກເຈົ້າບໍ່ປະຕິບັດຄວາມຈິງ, ແລ້ວພວກເຈົ້າກໍ່ຈະເຫຼືອພຽງແຕ່ທິດສະດີ ແລະ ພວກເຈົ້າກໍຈະບໍ່ມີຊີວິດທີ່ເປັນຈິງ. ຄວາມຈິງແມ່ນສັນຍາລັກແຫ່ງວຸດທິພາວະຂອງມະນຸດ ແລະ ບໍ່ວ່າເຈົ້າຈະປະຕິບັດຄວາມຈິງໄດ້ ຫຼື ບໍ່ແມ່ນຂຶ້ນຢູ່ກັບວ່າເຈົ້າມີວຸດທິພາວະທີ່ເປັນຈິງ ຫຼື ບໍ່. ຖ້າເຈົ້າບໍ່ປະຕິບັດຄວາມຈິງ, ບໍ່ປະພຶດຢ່າງ

ຊອບທຳ ຫຼື ຫວັ່ນໄຫວໄປມາຕາມອາລົມ ແລະ ສົນໃຈແຕ່ເນື້ອໜັງ, ແລ້ວເຈົ້າແມ່ນຍັງໄກຫຼາຍໃນເລື່ອງການຮັກສາພຣະບັນຍັດ. ນີ້ແມ່ນບົດຮຽນທີ່ເລິກເຊິ່ງທີ່ສຸດ. ໃນທຸກຍຸກ, ມີຄວາມຈິງຫຼາຍປະການທີ່ຈະໃຫ້ມະນຸດຈຳເປັນຕ້ອງມີເພື່ອເຂົ້າສູ່ ແລະ ເຂົ້າໃຈ, ແຕ່ໃນແຕ່ລະຍຸກແມ່ນມີພຣະບັນຍັດແຕກຕ່າງກັນທີ່ຕິດຕາມກັບຄວາມຈິງເຫຼົ່ານີ້. ຄວາມຈິງທີ່ຜູ້ຄົນປະຕິບັດແມ່ນກ່ຽວຂ້ອງກັບຍຸກດັ່ງກ່າວໂດຍສະເພາະ ແລະ ດ້ວຍເຫດນັ້ນກໍ່ກ່ຽວຂ້ອງກັບພຣະບັນຍັດທີ່ພວກເຂົາຮັກສາເຊັ່ນກັນ. ແຕ່ລະຍຸກມີຄວາມຈິງຂອງມັນເອງໃຫ້ປະຕິບັດຕາມ ແລະ ມີພຣະບັນຍັດໃຫ້ຮັກສາ. ເຖິງຢ່າງໃດກໍ່ຕາມ, ອີງຕາມພຣະບັນຍັດຕ່າງໆທີ່ພຣະເຈົ້າປະກາດໃຊ້ ນັ້ນກໍ່ຄື ອີງຕາມຍຸກທີ່ແຕກຕ່າງກັ, ເປົ້າໝາຍ ແລະຜົນສະທ້ອນຂອງການປະຕິບັດຄວາມຈິງຂອງມະນຸດແມ່ນແຕກຕ່າງກັນຢ່າງສິ້ນເຊີງ. ມັນສາມາດເວົ້າໄດ້ວ່າພຣະບັນຍັດຮັບໃຊ້ຄວາມຈິງ ແລະ ຄວາມຈິງກໍ່ເກີດຂຶ້ນເພື່ອຮັກສາພຣະບັນຍັດ. ຖ້າມີພຽງແຕ່ຄວາມຈິງ ແລ້ວມັນກໍ່ຈະບໍ່ມີການປ່ຽນແປງໃນພາລະກິດຂອງພຣະເຈົ້າໃຫ້ກ່າວເຖິງເລີຍ. ເຖິງຢ່າງໃດກໍ່ຕາມ, ໂດຍອ້າງອີງເຖິງພຣະບັນຍັດ, ມະນຸດສາມາດລະບຸເຖິງຂອບເຂດກະແສໃນພາລະກິດຂອງພຣະວິນຍານບໍລິສຸດ ແລະ ມະນຸດສາມາດຮູ້ຈັກຍຸກທີ່ພຣະເຈົ້າປະຕິບັດພາລະກິດ. ໃນທາງສາສະໜາ, ມີຫຼາຍຄົນທີ່ສາມາດປະຕິບັດຄວາມຈິງທີ່ເຄີຍຖືກປະຕິບັດໂດຍຜູ້ຄົນໃນຍຸກແຫ່ງພຣະບັນຍັດ. ເຖິງຢ່າງໃດກໍ່ຕາມ, ພວກເຂົາບໍ່ມີພຣະບັນຍັດແຫ່ງຍຸກໃໝ່ ຫຼື ພວກເຂົາບໍ່ສາມາດຮັກສາພຣະບັນຍັດແຫ່ງຍຸກໃໝ່ໄດ້. ພວກເຂົາຍັງຮັກສາຫົນທາງເກົ່າ ແລະ ຍັງຄົງເປັນມະນຸດໃນສະໄໝເດີມ. ພວກເຂົາບໍ່ໄດ້ຮັບວິທີການໃໝ່ຂອງພາລະກິດ ແລະ ບໍ່ສາມາດເຫັນພຣະບັນຍັດແຫ່ງຍຸກໃໝ່. ເມື່ອເປັນດັ່ງນັ້ນ, ພວກເຂົາຈຶ່ງບໍ່ມີພາລະກິດຂອງພຣະເຈົ້າ. ມັນເປັນຄືກັບວ່າ ພວກເຂົາມີພຽງແຕ່ເປືອກໄຂ່ເປົ່າ; ຖ້າບໍ່ມີລູກໄກ່ຢູ່ຂ້າງໃນ, ແລ້ວມັນກໍ່ຈະບໍ່ມີຈິດວິນຍານ. ຖ້າຈະເວົ້າໃຫ້ຖືກກວ່ານີ້ກໍ່ຄື ພວກເຂົາບໍ່ມີຊີວິດ. ມະນຸດດັ່ງກ່າວບໍ່ທັນໄດ້ເຂົ້າສູ່ຍຸກໃໝ່ ແລະ ຫຼ້າຫຼັງໃນຫຼາຍບາດກ້າວ. ສະນັ້ນ, ການມີຄວາມຈິງຈາກຍຸກເດີມແຕ່ບໍ່ມີພຣະບັນຍັດແຫ່ງຍຸກໃໝ່ກໍ່ບໍ່ມີປະໂຫຍດຫຍັງ. ພວກເຈົ້າຫຼາຍຄົນປະຕິບັດຄວາມຈິງໃນປັດຈຸບັນ ແຕ່ບໍ່ໄດ້ຮັກສາພຣະບັນຍັດໃນປັດຈຸບັນ. ພວກເຈົ້າຈະບໍ່ໄດ້ຮັບຫຍັງເລີຍ ແລະ ຄວາມຈິງທີ່ພວກເຈົ້າປະຕິບັດຈະບໍ່ມີຄ່າຫຍັງ ແລະ ບໍ່ມີຄວາມໝາຍ ແລະ ພຣະເຈົ້າຈະບໍ່ຍ້ອງຍໍເຈົ້າ. ການປະຕິບັດຄວາມຈິງຕ້ອງຖືກເຮັດໃຫ້ສຳເລັດພາຍໃນຂອບເຂດວິທີການຂອງພາລະກິດໃນປັດຈຸບັນຂອງພຣະວິນຍານບໍລິສຸດ; ມັນຕ້ອງຖືກເຮັດໃຫ້ສຳເລັດຕາມສຽງຂອງພຣະເຈົ້າທີ່ເປັນຈິງໃນປັດຈຸບັນ. ຖ້າປາສະຈາກສິ່ງນີ້, ທຸກສິ່ງກໍ່ຈະສູນເປົ່າ, ຄືກັບການພະຍາຍາມການຕັກນໍ້າດ້ວຍກະຕ່າໄມ້ໄຜ່. ນີ້ແມ່ນຄວາມໝາຍຕົວຈິງຂອງການປະກາດໃຊ້ພຣະບັນຍັດແຫ່ງຍຸກໃໝ່. ຖ້າຜູ້ຄົນສາມາດປະຕິບັດຕາມພຣະບັນຍັດ, ຢ່າງໜ້ອຍທີ່ສຸດ ພວກເຂົາກໍ່ຄວນຈະຮູ້ຈັກພຣະເຈົ້າທີ່ແທ້ຈິງຜູ້ເຊິ່ງປາກົດໃນເນື້ອໜັງໂດຍບໍ່ສັບສົນ. ເວົ້າອີກຢ່າງໜຶ່ງກໍ່ຄື ຜູ້ຄົນຄວນເຂົ້າໃຈຫຼັກການແຫ່ງການປະຕິບັດຕາມພຣະບັນຍັດ. ການປະຕິບັດຕາມພຣະບັນຍັດບໍ່ໄດ້ໝາຍເຖິງການປະຕິບັດຕາມບຸນຕາມກຳ ຫຼື ຕາມອຳເພີໃຈ, ແຕ່ໝາຍເຖິງການປະຕິບັດຕາມພຣະບັນຍັດໂດຍມີພື້ນຖານ, ມີຈຸດປະສົງ ແລະ ມີຫຼັກການ. ສິ່ງທຳອິດທີ່ຈະຖືກບັນລຸກໍ່ຄືໃຫ້ນິມິດຂອງເຈົ້າຊັດເຈນ. ຖ້າເຈົ້າມີຄວາມເຂົ້າໃຈຢ່າງຖີ່ຖ້ວນກ່ຽວກັບພາລະກິດ

ຂອງພຣະວິນຍານບໍລິສຸດໃນເວລາປັດຈຸບັນ ແລະ ຖ້າເຈົ້າເຂົ້າສູ່ວິທີການຂອງພາລະກິດໃນປັດຈຸບັນ, ແລ້ວເຈົ້າຈະໄດ້ຮັບຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບການຮັກສາພຣະບັນຍັດ. ຖ້າຮອດມື້ທີ່ເຈົ້າເບິ່ງທະລຸແກ່ນແທ້ຂອງພຣະບັນຍັດແຫ່ງຍຸກໃໝ່ ແລະ ເຈົ້າສາມາດຮັກສາພຣະບັນຍັດນັ້ນໄວ້ໄດ້, ແລ້ວເຈົ້າກໍ່ຈະຖືກເຮັດໃຫ້ສົມບູນ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງການປະຕິບັດຄວາມຈິງ ແລະ ການຮັກສາພຣະບັນຍັດ. ບໍ່ວ່າເຈົ້າຈະສາມາດປະຕິບັດຄວາມຈິງໄດ້ ຫຼື ບໍ່ ແມ່ນຂຶ້ນຢູ່ກັບວິທີການທີ່ເຈົ້າຮັບຮູ້ແກ່ນແທ້ຂອງພຣະບັນຍັດແຫ່ງຍຸກໃໝ່. ພາລະກິດຂອງພຣະວິນຍານບໍລິສຸດຈະປາກົດຕໍ່ມະນຸດຢ່າງຕໍ່ເນື່ອງ ແລະ ພຣະເຈົ້າຈະຮຽກຮ້ອງຈາກມະນຸດຫຼາຍຂຶ້ນໄປເລື້ອຍໆ. ສະນັ້ນ, ຄວາມຈິງທີ່ມະນຸດນຳໄປປະຕິບັດກໍ່ຈະມີຫຼາຍຂຶ້ນກວ່າເກົ່າ ແລະ ຍິ່ງໃຫຍ່ຂຶ້ນ ແລະ ຜົນສະທ້ອນຂອງການຮັກສາພຣະບັນຍັດກໍ່ຈະເລິກເຊິ່ງຫຼາຍຍິ່ງຂຶ້ນ. ສະນັ້ນ, ພວກເຈົ້າຕ້ອງປະຕິບັດຄວາມຈິງ ແລະ ຮັກສາພຣະບັນຍັດໃນເວລາດຽວກັນ. ບໍ່ມີຜູ້ໃດຄວນລະເລີຍເລື່ອງນີ້; ປ່ອຍໃຫ້ຄວາມຈິງໃໝ່ ແລະ ພຣະບັນຍັດໃໝ່ເລີ່ມຕົ້ນໄປພ້ອມກັນໃນຍຸກໃໝ່ນີ້.

# ເຈົ້າຄວນຮູ້ວ່າ ພຣະເຈົ້າທີ່ແທ້ທີ່ແທ້ຈິງ ແມ່ນພຣະອົງເຈົ້າເອງ

ເຈົ້າຄວນຮູ້ຫຍັງແດ່ກ່ຽວກັບພຣະເຈົ້າທີ່ແທ້ຈິງ? ພຣະວິນຍານ, ບຸກຄົນ ແລະ ພຣະທຳປະກອບເປັນພຣະເຈົ້າທີ່ແທ້ຈິງ ແລະ ສິ່ງນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງພຣະເຈົ້າທີ່ແທ້ຈິງ. ຖ້າເຈົ້າພຽງແຕ່ຮູ້ຈັກບຸກຄົນເທົ່ານັ້ນ ນັ້ນກໍຄື ຖ້າເຈົ້າຮູ້ຈັກນິໄສ ແລະ ລັກສະນະຂອງພຣະອົງ ແຕ່ບໍ່ຮູ້ຈັກພາລະກິດຂອງພຣະວິນຍານ ຫຼື ສິ່ງທີ່ພຣະວິນຍານປະຕິບັດໃນເນື້ອໜັງ ແລະ ຖ້າເຈົ້າພຽງແຕ່ໃຫ້ຄວາມໃສ່ໃຈກັບພຣະວິນຍານ ແລະ ພຣະທຳ ແລະ ພຽງແຕ່ອະທິຖານຕໍ່ໜ້າພຣະວິນຍານ ແຕ່ບໍ່ຮູ້ຈັກພາລະກິດຂອງພຣະວິນຍານຂອງພຣະເຈົ້າທີ່ຢູ່ໃນພຣະເຈົ້າທີ່ແທ້ທີ່ແທ້ຈິງ ແລ້ວສິ່ງນີ້ກໍຍັງພິສູດອີກວ່າ ເຈົ້າບໍ່ຮູ້ຈັກພຣະເຈົ້າທີ່ແທ້ຈິງທີ່ແທ້ຈິງ. ຄວາມຮູ້ກ່ຽວກັບພຣະເຈົ້າທີ່ແທ້ຈິງລວມເຖິງການຮູ້ຈັກ ແລະ ການມີປະສົບການໃນພຣະທຳຂອງພຣະອົງ ແລະ ການເຂົ້າໃຈກົດລະບຽບ ແລະ ຫຼັກການແຫ່ງພາລະກິດຂອງພຣະວິນຍານບໍລິສຸດ ແລະ ວິທີທີ່ພຣະວິນຍານຂອງພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງ. ມັນຍັງລວມເຖິງການຮູ້ຈັກວ່າ ທຸກການກະທຳຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງແມ່ນຖືກຄວບຄຸມໂດຍພຣະວິນຍານ ແລະ ພຣະທຳຕ່າງໆທີ່ພຣະອົງກ່າວອອກມາແມ່ນການສຳແດງເຖິງພຣະວິນຍານໂດຍກົງ. ສະນັ້ນ ເພື່ອຮູ້ຈັກພຣະເຈົ້າທີ່ແທ້ຈິງ, ມັນເປັນສິ່ງສຳຄັນທີ່ສຸດທີ່ຕ້ອງຮູ້ຈັກວ່າ ພຣະເຈົ້າປະຕິບັດພາລະກິດໃນຄວາມເປັນມະນຸດ ແລະ ໃນຄວາມເປັນພຣະເຈົ້າແນວໃດ; ດ້ວຍເຫດນັ້ນ ສິ່ງນີ້ຈຶ່ງກ່ຽວຂ້ອງກັບການສຳແດງເຖິງພຣະວິນຍານ ເຊິ່ງທຸກຄົນມີສ່ວນຮ່ວມນຳ.

ແມ່ນຫຍັງຄືລັກສະນະຂອງການສຳແດງເຖິງພຣະວິນຍານ? ບາງຄັ້ງ ພຣະເຈົ້າປະຕິບັດພາລະກິດໃນຄວາມເປັນມະນຸດ ແລະ ບາງຄັ້ງກໍປະຕິບັດໃນຄວາມເປັນພຣະເຈົ້າ, ແຕ່ໃນທັງສອງກໍລະນີ ແມ່ນຄວບຄຸມໂດຍພຣະວິນຍານ. ວິນຍານຫຍັງກໍຕາມທີ່ຢູ່ພາຍໃນຜູ້ຄົນແມ່ນການສຳແດງອອກພາຍນອກຂອງພວກເຂົາ. ພຣະວິນຍານປະຕິບັດພາລະກິດເປັນປົກກະຕິ ແຕ່ມີສອງສ່ວນທີ່ກ່ຽວກັບການຄວບຄຸມຂອງພຣະວິນຍານ ນັ້ນກໍຄື: ສ່ວນໜຶ່ງແມ່ນພາລະກິດຂອງພຣະອົງໃນຄວາມເປັນມະນຸດ ແລະ ອີກສ່ວນແມ່ນພາລະກິດຂອງພຣະອົງຜ່ານທາງຄວາມເປັນພຣະເຈົ້າ. ເຈົ້າຄວນຮູ້ຈັກສິ່ງນີ້ຢ່າງຊັດເຈນ. ພາລະກິດຂອງພຣະວິນຍານປ່ຽນແປງຕາມສະຖານະການ ນັ້ນກໍຄື: ເມື່ອພາລະກິດຝ່າຍມະນຸດຂອງພຣະອົງຮຽກຮ້ອງຕ້ອງການ ພຣະວິນຍານກໍຈະຄວບຄຸມພາລະກິດຝ່າຍມະນຸດນີ້ ແລະ ເມື່ອພາລະກິດຝ່າຍພຣະເຈົ້າຂອງພຣະອົງຮຽກຮ້ອງຕ້ອງການ ຄວາມເປັນພຣະເຈົ້າກໍຈະປາກົດໂດຍກົງເພື່ອປະຕິບັດພາລະກິດນີ້ໃຫ້ສຳເລັດ. ຍ້ອນພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງ ແລະ ປາກົດໃນເນື້ອໜັງ, ພຣະອົງຈຶ່ງປະຕິບັດພາລະກິດທັງໃນຄວາມເປັນມະນຸດ ແລະ ໃນຄວາມເປັນພຣະເຈົ້າ. ພາລະກິດຂອງພຣະອົງໃນຄວາມເປັນມະນຸດຖືກຄວບຄຸມໂດຍພຣະວິນຍານ ແລະ ສຳເລັດລົງເພື່ອເປັນທີ່ພໍໃຈຄວາມຕ້ອງການທາງເນື້ອໜັງຂອງຜູ້ຄົນ, ເພື່ອເຮັດໃຫ້ການມີສ່ວນຮ່ວມຂອງພວກເຂົາກັບພຣະອົງງ່າຍຂຶ້ນ, ເພື່ອອະນຸຍາດໃຫ້ພວກເຂົາເຫັນຄວາມເປັນຈິງ ແລະ ຄວາມທຳມະດາຂອງພຣະເຈົ້າ ແລະ

ເພື່ອໃຫ້ພວກເຂົາເຫັນວ່າ ພຣະວິນຍານຂອງພຣະເຈົ້າໄດ້ມາຢູ່ໃນເນື້ອໜັງ ແລະ ຢູ່ທ່າມກາງມະນຸດ, ດຳລົງຊີວິດຮ່ວມກັບມະນຸດ ແລະ ມີສ່ວນຮ່ວມກັບມະນຸດ. ພາລະກິດຂອງພຣະອົງໃນຄວາມເປັນພຣະເຈົ້າແມ່ນເພື່ອຈັດກຽມຊີວິດຂອງຜູ້ຄົນ ແລະ ນຳພາຜູ້ຄົນໃນທຸກສິ່ງທີ່ເປັນບວກ ໂດຍປ່ຽນແປງອຸປະນິໄສຂອງຜູ້ຄົນ ແລະ ເຮັດໃຫ້ພວກເຂົາເຫັນເຖິງການປາກົດຕົວຂອງພຣະວິນຍານໃນເນື້ອໜັງຢ່າງແທ້ຈິງ. ໂດຍລວມແລ້ວ, ການເຕີບໂຕໃນຊີວິດຂອງມະນຸດແມ່ນຖືກບັນລຸໂດຍກົງຜ່ານພາລະກິດຂອງພຣະເຈົ້າ ແລະ ພຣະທຳໃນຄວາມເປັນພຣະເຈົ້າ. ຖ້າຜູ້ຄົນຍອມຮັບພາລະກິດຂອງພຣະເຈົ້າໃນຄວາມເປັນພຣະເຈົ້າເທົ່ານັ້ນ ພວກເຂົາຈຶ່ງສາມາດບັນລຸການປ່ຽນແປງອຸປະນິໄສຂອງພວກເຂົາໄດ້, ແລ້ວເມື່ອນັ້ນພວກເຂົາຈຶ່ງຈະສາມາດອີ່ມອົກອີ່ມໃຈໃນທາງວິນຍານຂອງພວກເຂົາໄດ້; ນອກຈາກນີ້, ຖ້າມີພາລະກິດໃນຄວາມເປັນມະນຸດຖືກເພີ່ມເຂົ້າໃນສິ່ງນີ້ເທົ່ານັ້ນ ນັ້ນກໍຄື: ການລ້ຽງດູຂອງພຣະເຈົ້າ, ການສະໜັບສະໜູນ ແລະ ການຈັດກຽມໃນຄວາມເປັນມະນຸດ, ຜົນແຫ່ງພາລະກິດຂອງພຣະເຈົ້າຈຶ່ງຈະສາມາດຖືກບັນລຸໄດ້ຢ່າງສົມບູນ. ພຣະເຈົ້າທີ່ແທ້ຈິງທີ່ເວົ້າເຖິງໃນປັດຈຸບັນແມ່ນປະຕິບັດພາລະກິດທັງໃນຄວາມເປັນມະນຸດ ແລະ ຄວາມເປັນພຣະເຈົ້າ. ຜ່ານການປາກົດຕົວຂອງພຣະເຈົ້າທີ່ແທ້ຈິງ, ພາລະກິດ ແລະ ຊີວິດມະນຸດທຳມະດາຂອງພຣະອົງ ແລະ ພາລະກິດທາງພຣະເຈົ້າທັງໝົດຂອງພຣະອົງຈຶ່ງຈະຖືກບັນລຸຢ່າງຄົບຖ້ວນ. ຄວາມເປັນມະນຸດ ແລະ ຄວາມເປັນພຣະເຈົ້າຖືກລວມເຂົ້າກັນໃຫ້ກາຍເປັນໜຶ່ງ ແລະ ພາລະກິດຂອງທັງສອງຢ່າງ ແມ່ນຖືກເຮັດໃຫ້ສຳເລັດຜ່ານທາງພຣະທຳ; ບໍ່ວ່າຈະໃນຄວາມເປັນມະນຸດ ຫຼື ຄວາມເປັນພຣະເຈົ້າ, ພຣະອົງກ່າວພຣະທຳ. ເມື່ອພຣະເຈົ້າປະຕິບັດພາລະກິດໃນຄວາມເປັນມະນຸດ, ພຣະອົງກ່າວໃນພາສາມະນຸດ ເພື່ອຜູ້ຄົນຈະມີສ່ວນຮ່ວມ ແລະ ເຂົ້າໃຈ. ພຣະທຳຂອງພຣະອົງຖືກກ່າວອອກຢ່າງແຈ່ມແຈ້ງ ແລະ ເຂົ້າໃຈງ່າຍ ຈົນເຖິງຂັ້ນທີ່ພຣະທຳເຫຼົ່ານັ້ນສາມາດຈັດກຽມໃຫ້ກັບທຸກຄົນໄດ້; ບໍ່ວ່າຜູ້ຄົນຈະປະກອບດ້ວຍຄວາມຮູ້ ຫຼື ມີການສຶກສາຕໍ່າ ຫຼື ບໍ່, ພວກເຂົາກໍສາມາດຮັບເອົາພຣະທຳຂອງພຣະເຈົ້າທັງໝົດໄດ້. ພາລະກິດຂອງພຣະເຈົ້າໃນຄວາມເປັນພຣະເຈົ້າແມ່ນຖືກປະຕິບັດຜ່ານທາງພຣະທຳ ແຕ່ມັນເຕັມໄປດ້ວຍການຈັດກຽມ, ເຕັມໄປດ້ວຍຊີວິດ, ບໍ່ມີມົນທິນຈາກຄວາມຄິດຂອງມະນຸດ, ບໍ່ກ່ຽວພັນເຖິງຄວາມນິຍົມຂອງມະນຸດ ແລະ ປາສະຈາກຂໍ້ຈຳກັດຂອງມະນຸດ, ຢູ່ນອກຂໍ້ຜູກມັດຂອງຄວາມເປັນມະນຸດທີ່ທຳມະດາ; ມັນຖືກປະຕິບັດໃນເນື້ອໜັງແຕ່ເປັນການສຳແດງເຖິງພຣະວິນຍານໂດຍກົງ. ຖ້າຜູ້ຄົນພຽງແຕ່ຍອມຮັບພາລະກິດຂອງພຣະເຈົ້າໃນຄວາມເປັນມະນຸດ ແລ້ວພວກເຂົາກໍຈະຈຳກັດຕົນເອງໃຫ້ຢູ່ແຕ່ໃນຂອບເຂດໃດໜຶ່ງ ແລ້ວຈະຕ້ອງການໆຈັດການ, ການລິຮານ ແລະ ວິໄນເພື່ອເຮັດໃຫ້ເກີດມີການປ່ຽນແປງເລັກນ້ອຍໃນຕົວພວກເຂົາຕະຫຼອດໄປ. ເຖິງຢ່າງໃດກໍຕາມ ຫາກປາສະຈາກພາລະກິດ ຫຼື ການສະຖິດຢູ່ຂອງພຣະວິນຍານບໍລິສຸດ, ພວກເຂົາກໍຈະຫັນໄປເພິ່ງຄວາມຊ່ວຍເຫຼືອຈາກວິທີເດີມໆຂອງພວກເຂົາ; ມີແຕ່ຜ່ານທາງພາລະກິດແຫ່ງຄວາມເປັນພຣະເຈົ້າເທົ່ານັ້ນ, ຂໍ້ບົກຜ່ອງ ແລະ ຄວາມຂາດເຂີນເຫຼົ່ານີ້ຈຶ່ງຈະໄດ້ຮັບການແກ້ໄຂ ແລະ ພຽງເມື່ອນັ້ນ ຜູ້ຄົນຈຶ່ງຈະສາມາດຖືກເຮັດໃຫ້ສົມບູນ. ແທນທີ່ຈະເປັນການຈັດການ ແລະ ລິຮານຢ່າງຕໍ່ເນື່ອງ, ສິ່ງທີ່ຈຳເປັນກໍຄືການຈັດກຽມທາງດ້ານບວກ, ການນຳໃຊ້ພຣະທຳເພື່ອທົດ

ແທນຂໍ້ບົກພ່ອງທຸກຂໍ້, ນຳໃຊ້ພຣະທຳເພື່ອເປີດເຜີຍທຸກສະພາວະຂອງຜູ້ຄົນ, ນຳໃຊ້ພຣະທຳເພື່ອນຳທາງຊີວິດຂອງພວກເຂົາ, ທຸກຖ້ອຍຄຳຂອງພວກເຂົາ, ທຸກການກະທຳຂອງພວກເຂົາ, ເພື່ອເປີດເຜີຍເຈດຕະນາ ແລະ ຄວາມຕັ້ງໃຈຂອງພວກເຂົາ; ສິ່ງນີ້ຄືພາລະກິດທີ່ແທ້ຈິງຂອງພຣະເຈົ້າທີ່ແທ້ຈິງ. ແລ້ວດ້ວຍເຫດນັ້ນ, ໃນທ່າທີຂອງເຈົ້າຕໍ່ພຣະເຈົ້າທີ່ແທ້ຈິງ ເຈົ້າຄວນຍອມຢູ່ຕໍ່ໜ້າຄວາມເປັນມະນຸດຂອງພຣະອົງໃນຄັ້ງດຽວ ໂດຍຮັບຮູ້ ແລະ ຍອມຮັບພຣະອົງ ແລະ ຍິ່ງໄປກວ່ານັ້ນ ເຈົ້າຄວນຍອມຮັບ ແລະ ເຊື່ອຟັງພາລະກິດ ແລະ ພຣະທຳອັນບໍລິສຸດຂອງພຣະອົງ. ການປາກົດຕົວຂອງພຣະເຈົ້າໃນເນື້ອໜັງໝາຍຄວາມວ່າ ພາລະກິດ ແລະ ພຣະທຳທຸກຂໍ້ຂອງພຣະວິນຍານຂອງພຣະເຈົ້າຖືກເຮັດໃຫ້ສຳເລັດຜ່ານຄວາມເປັນມະນຸດທີ່ທຳມະດາຂອງພຣະອົງ ແລະ ຜ່ານທາງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງ. ເວົ້າອີກຢ່າງໜຶ່ງກໍຄື ພຣະວິນຍານຂອງພຣະເຈົ້າທັງຊີ້ນຳພາລະກິດມະນຸດຂອງພຣະອົງ ແລະ ປະຕິບັດພາລະກິດແຫ່ງຄວາມເປັນພຣະເຈົ້າໃນເນື້ອໜັງ ແລະ ໃນພຣະເຈົ້າທີ່ບັງເກີດເປັນມະນຸດ ເຈົ້າສາມາດເຫັນທັງພາລະກິດຂອງພຣະເຈົ້າໃນຄວາມເປັນມະນຸດ ແລະ ພາລະກິດອັນສັກສິດອັນສົມບູນແບບຂອງພຣະອົງ; ສິ່ງນີ້ຍິ່ງເປັນຄວາມໝາຍສຳຄັນຕົວຈິງແຫ່ງການປາກົດຕົວທີ່ແທ້ຈິງໃນເນື້ອໜັງຂອງພຣະເຈົ້າທີ່ແທ້ຈິງ. ຖ້າເຈົ້າສາມາດເຫັນສິ່ງນີ້ຢ່າງຊັດເຈນ, ເຈົ້າກໍຈະສາມາດເຊື່ອມຕໍ່ທຸກພາກສ່ວນຕ່າງໆທີ່ແຕກຕ່າງກັນຂອງພຣະເຈົ້າ, ເຈົ້າຈະເຊົາໃຫ້ຄວາມສຳຄັນຫຼາຍເກີນໄປໃນພາລະກິດຄວາມເປັນພຣະເຈົ້າຂອງພຣະອົງ ແລະ ເຈົ້າຈະເຊົາໃສ່ໃຈເກີນໄປເຖິງພາລະກິດຂອງພຣະອົງທີ່ຢູ່ໃນຄວາມເປັນມະນຸດດ້ວຍຄວາມລະເລີຍເກີນຄວນ ແລະ ເຈົ້າກໍຈະບໍ່ເຮັດເກີນໄປ ຫຼື ອອກນອກທິດນອກທາງເກີນໄປ. ໂດຍລວມແລ້ວ ຄວາມໝາຍຂອງພຣະເຈົ້າທີ່ແທ້ຈິງ ແມ່ນໝາຍເຖິງພາລະກິດແຫ່ງຄວາມເປັນມະນຸດຂອງພຣະອົງ ແລະ ແຫ່ງຄວາມເປັນພຣະເຈົ້າຂອງພຣະອົງ ໂດຍຖືກຄວບຄຸມໂດຍພຣະວິນຍານ ທີ່ຖືກສຳແດງອອກຜ່ານທາງເນື້ອໜັງຂອງພຣະອົງ ເພື່ອວ່າຜູ້ຄົນຈະສາມາດເຫັນວ່າພຣະອົງມີຊີວິດຊີວາຄືຄົນທົ່ວໄປ, ເປັນຈິງ ແລະ ແທ້ຈິງ.

ພາລະກິດຂອງພຣະວິນຍານຂອງພຣະເຈົ້າໃນຄວາມເປັນມະນຸດມີຂັ້ນຕອນການປ່ຽນແປງ. ໃນການເຮັດໃຫ້ຄວາມເປັນມະນຸດສົມບູນ, ພຣະອົງເຮັດໃຫ້ຄວາມເປັນມະນຸດຂອງພຣະອົງສາມາດຮັບການຊີ້ນຳຂອງພຣະວິນຍານ ຫຼັງຈາກນັ້ນ ຄວາມເປັນມະນຸດຂອງພຣະອົງກໍຈະສາມາດຈັດກຽມ ແລະ ລ້ຽງດູຄຣິດຕະຈັກທັງຫຼາຍໄດ້. ນີ້ຄືການສຳແດງອອກໜຶ່ງຢ່າງຂອງພາລະກິດທີ່ທຳມະດາຂອງພຣະເຈົ້າ. ສະນັ້ນ ຖ້າເຈົ້າສາມາດເຫັນຫຼັກການແຫ່ງພາລະກິດຂອງພຣະເຈົ້າໃນຄວາມເປັນມະນຸດຢ່າງຊັດເຈນແລ້ວເຈົ້າອາດຈະບໍ່ມີແນວຄວາມຄິດກ່ຽວກັບພາລະກິດຂອງພຣະເຈົ້າໃນຄວາມເປັນມະນຸດ. ບໍ່ວ່າຫຍັງກໍຕາມ, ພຣະວິນຍານຂອງພຣະເຈົ້າບໍ່ສາມາດຜິດໄດ້. ພຣະອົງຖືກ ແລະ ປາສະຈາກຄວາມຜິດພາດ; ພຣະອົງບໍ່ໄດ້ເຮັດຫຍັງກໍຕາມທີ່ບໍ່ຖືກຕ້ອງ. ພາລະກິດສັກສິດແມ່ນການສຳແດງອອກເຖິງຄວາມປະສົງຂອງພຣະເຈົ້າໂດຍກົງ ເຊິ່ງປາສະຈາກການແຊກແຊງຂອງຄວາມເປັນມະນຸດ. ມັນບໍ່ໄດ້ຜ່ານຄວາມສົມບູນ ແຕ່ມາຈາກພຣະວິນຍານໂດຍກົງ. ຢ່າງໃດກໍຕາມ ຄວາມຈິງທີ່ພຣະອົງສາມາດປະຕິບັດພາລະກິດໃນຄວາມເປັນພຣະເຈົ້າໄດ້ກໍຍ້ອນຄວາມເປັນມະນຸດທີ່ທຳມະດາຂອງພຣະອົງ; ມັນບໍ່ແມ່ນສິ່ງ

ທີ່ເໜືອທຳມະຊາດເລີຍແມ່ນແຕ່ໜ້ອຍດຽວ ແລະ ເບິ່ງຄືວ່າຖືກປະຕິບັດໂດຍບຸກຄົນທຳມະດາ. ພຣະເຈົ້າລົງມາຈາກສະຫວັນສູ່ແຜ່ນດິນໂລກຕົ້ນຕໍແລ້ວແມ່ນເພື່ອສຳແດງພຣະທຳຂອງພຣະເຈົ້າຜ່ານທາງເນື້ອໜັງ, ເພື່ອເຮັດໃຫ້ພາລະກິດແຫ່ງພຣະວິນຍານຂອງພຣະເຈົ້າສົມບູນໂດຍວິທີການຂອງເນື້ອໜັງ.

ໃນປັດຈຸບັນ ຄວາມຮູ້ຂອງຜູ້ຄົນກ່ຽວກັບພຣະເຈົ້າທີ່ແທ້ຈິງກໍຍັງອຳອຽງເກີນໄປ ແລະ ຄວາມເຂົ້າໃຈຂອງພວກເຂົາກ່ຽວກັບຄວາມສຳຄັນຂອງການບັງເກີດເປັນມະນຸດກໍຍັງນ້ອຍເກີນໄປ. ກັບເນື້ອໜັງຂອງພຣະເຈົ້າ, ຜູ້ຄົນເຫັນຜ່ານພາລະກິດ ແລະ ພຣະທຳຂອງພຣະອົງວ່າ ພຣະວິນຍານຂອງພຣະເຈົ້າມີຫຼາຍສິ່ງຫຼາຍຢ່າງ, ວ່າພຣະອົງອຸດົມສົມບູນຫຼາຍ. ເຖິງຢ່າງໃດກໍ່ຕາມ, ຄຳພະຍານຂອງພຣະເຈົ້າກໍມາຈາກພຣະວິນຍານຂອງພຣະເຈົ້າໃນທີ່ສຸດ ນັ້ນກໍຄື: ສິ່ງທີ່ພຣະເຈົ້າກະທຳໃນເນື້ອໜັງ, ຫຼືການທີ່ພຣະອົງປະຕິບັດພາລະກິດ, ສິ່ງທີ່ພຣະອົງກະທຳໃນຄວາມເປັນມະນຸດ ແລະ ສິ່ງທີ່ພຣະອົງກະທຳໃນຄວາມເປັນພຣະເຈົ້າ. ຜູ້ຄົນຕ້ອງມີຄວາມຮູ້ກ່ຽວກັບສິ່ງນີ້. ໃນປັດຈຸບັນ ເຈົ້າສາມາດນະມັດສະການບຸກຄົນນີ້ ໃນຂະນະທີ່ໃນແກ່ນແທ້ແລ້ວ ເຈົ້າກຳລັງນະມັດສະການພຣະວິນຍານ ແລະ ນັ້ນຄືສິ່ງເລັກນ້ອຍທີ່ສຸດທີ່ຜູ້ຄົນຄວນບັນລຸໃນຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າທີ່ບັງເກີດເປັນມະນຸດ ນັ້ນກໍຄື: ການຮູ້ແກ່ນແທ້ຂອງພຣະວິນຍານຜ່ານເນື້ອໜັງ, ການຮູ້ພາລະກິດສັກສິດຂອງພຣະວິນຍານໃນເນື້ອໜັງ ແລະ ພາລະກິດມະນຸດໃນເນື້ອໜັງ, ການຍອມຮັບພຣະທຳທຸກຂໍ້ ແລະ ຖ້ອຍຄຳໃນເນື້ອໜັງຂອງພຣະວິນຍານ ແລະ ການເຫັນວ່າ ພຣະວິນຍານຂອງພຣະເຈົ້າຊີ້ນຳເນື້ອໜັງ ແລະ ສຳແດງລິດອຳນາດຂອງພຣະອົງໃນເນື້ອໜັງແນວໃດ. ນີ້ໝາຍຄວາມວ່າ ມະນຸດໄດ້ຮູ້ຈັກພຣະວິນຍານໃນສະຫວັນຜ່ານທາງເນື້ອໜັງ; ການປາກົດຕົວຂອງພຣະເຈົ້າທີ່ແທ້ຈິງທ່າມກາງມະນຸດໄດ້ກຳຈັດພຣະເຈົ້າເລື່ອນລອຍທີ່ຢູ່ໃນແນວຄິດຂອງຜູ້ຄົນ. ການນະມັດສະການພຣະເຈົ້າທີ່ແທ້ຈິງຂອງຜູ້ຄົນໄດ້ເພີ່ມຄວາມເຊື່ອຟັງຂອງພວກເຂົາທີ່ມີຕໍ່ພຣະເຈົ້າ ແລະ ຜ່ານພາລະກິດສັກສິດຂອງພຣະວິນຍານຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ ແລະ ພາລະກິດມະນຸດຂອງພຣະອົງທີ່ຢູ່ໃນເນື້ອໜັງ, ມະນຸດຈຶ່ງສາມາດຮັບການເປີດເຜີຍ ແລະ ໄດ້ຮັບການດູແລ ແລະ ມີການບັນລຸການປ່ຽນແປງໃນຊີວິດ-ອຸປະນິໄສຂອງມະນຸດ. ນີ້ແມ່ນຄວາມໝາຍທີ່ແທ້ຈິງຂອງການມາຂອງພຣະວິນຍານໃນເນື້ອໜັງ ແລະ ຈຸດປະສົງຕົ້ນຕໍ ກໍແມ່ນເພື່ອໃຫ້ຜູ້ຄົນໄດ້ມີສ່ວນຮ່ວມກັບພຣະເຈົ້າ, ເພິ່ງພາພຣະເຈົ້າ ແລະ ໄດ້ຮັບຄວາມຮູ້ກ່ຽວກັບພຣະເຈົ້າ.

ໂດຍລວມແລ້ວ ແມ່ນຫຍັງຄືທັດສະນະຄະຕິທີ່ຜູ້ຄົນຄວນມີຕໍ່ພຣະເຈົ້າທີ່ແທ້ຈິງ? ເຈົ້າຮູ້ຫຍັງກ່ຽວກັບການບັງເກີດເປັນມະນຸດ, ກ່ຽວກັບການປາກົດຕົວໃນເນື້ອໜັງຂອງພຣະທຳ, ກ່ຽວກັບການປາກົດຕົວໃນເນື້ອໜັງຂອງພຣະເຈົ້າ, ກ່ຽວກັບການກະທຳຂອງພຣະເຈົ້າທີ່ແທ້ຈິງ? ຫົວຂໍ້ຫຼັກຂອງການສົນທະນາໃນປັດຈຸບັນແມ່ນຫຍັງ? ການບັງເກີດເປັນມະນຸດ, ການມາຂອງພຣະທຳໃນເນື້ອໜັງ ແລະ ການປາກົດຕົວຂອງພຣະເຈົ້າໃນເນື້ອໜັງ ລ້ວນເປັນປະເດັນທີ່ຕ້ອງໄດ້ຮັບການເຂົ້າໃຈ. ພວກເຈົ້າຕ້ອງໄດ້ເຂົ້າໃຈບັນຫາເຫຼົ່ານີ້ເທື່ອລະໜ້ອຍ ແລະ ຕ້ອງມີຄວາມຮູ້ທີ່ຊັດເຈນກ່ຽວກັບພວກມັນໃນປະສົບການຊີວິດຂອງພວກເຈົ້າ ໂດຍອີງຕາມວຸດທິພາວະຂອງພວກເຈົ້າ ແລະ ອີງຕາມຍຸກສະໄໝ. ຂະບວນການທີ່ຜູ້ຄົນມີປະສົບການກັບພຣະທຳຂອງພຣະເຈົ້າກໍຄືກັບຂະບວນການທີ່

ພວກເຂົາຮູ້ຈັກການປາກົດຕົວຂອງພຣະທຳຂອງພຣະເຈົ້າໃນເນື້ອໜັງ. ຍິ່ງຜູ້ຄົນມີປະສົບການກັບພຣະທຳຂອງພຣະເຈົ້າຫຼາຍສໍ່າໃດ ພວກເຂົາກໍຍິ່ງຮູ້ຈັກພຣະວິນຍານຂອງພຣະເຈົ້າຫຼາຍສໍ່ານັ້ນ; ຜ່ານການສໍາຜັດພຣະທໍາຂອງພຣະເຈົ້າ, ຜູ້ຄົນສາມາດເຂົ້າໃຈເຖິງຫຼັກການແຫ່ງພາລະກິດຂອງພຣະວິນຍານ ແລະ ຮຽນຮູ້ພຣະເຈົ້າທີ່ແທ້ຈິງ. ໃນຄວາມຈິງແລ້ວ ເມື່ອພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນ ແລະ ຮັບເອົາພວກເຂົາ, ພຣະອົງກຳລັງປ່ອຍໃຫ້ພວກເຂົາຮູ້ຈັກເຖິງການກະທຳຂອງພຣະເຈົ້າທີ່ແທ້ຈິງ; ພຣະອົງກຳລັງໃຊ້ພາລະກິດຂອງພຣະເຈົ້າທີ່ແທ້ຈິງເພື່ອສະແດງໃຫ້ຜູ້ຄົນເຫັນເຖິງຄວາມໝາຍສຳຄັນທີ່ແທ້ຈິງຂອງການບັງເກີດເປັນມະນຸດ ແລະ ເພື່ອສະແດງໃຫ້ພວກເຂົາເຫັນວ່າ ພຣະວິນຍານຂອງພຣະເຈົ້າໄດ້ປາກົດຕົວຕໍ່ໜ້າມະນຸດຢ່າງແທ້ຈິງ. ເມື່ອຜູ້ຄົນຖືກຮັບເອົາ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນ, ການສຳແດງອອກຂອງພຣະເຈົ້າທີ່ແທ້ຈິງໄດ້ເອົາຊະນະພວກເຂົາ, ພຣະທຳຂອງພຣະເຈົ້າທີ່ແທ້ຈິງໄດ້ປ່ຽນແປງພວກເຂົາ ແລະ ເຮັດໃຫ້ຊີວິດຂອງພຣະອົງຢູ່ໃນພວກເຂົາ, ເຕີມເຕັມພວກເຂົາດ້ວຍສິ່ງທີ່ພຣະອົງເປັນ (ບໍ່ວ່າສິ່ງທີ່ພຣະອົງເປັນໃນຄວາມເປັນມະນຸດຂອງພຣະອົງ ຫຼື ສິ່ງທີ່ພຣະອົງເປັນໃນຄວາມເປັນພຣະເຈົ້າຂອງພຣະອົງ), ເຕີມເຕັມພວກເຂົາດ້ວຍແກ່ນແທ້ແຫ່ງພຣະທຳຂອງພຣະອົງ ແລະ ເຮັດໃຫ້ຜູ້ຄົນດຳລົງຊີວິດຕາມພຣະທຳຂອງພຣະອົງ. ເມື່ອພຣະເຈົ້າໄດ້ຮັບເອົາຜູ້ຄົນ, ພຣະອົງປະຕິບັດແບບນັ້ນ ຕົ້ນຕໍ ແມ່ນໃຊ້ພຣະທຳ ແລະ ຖ້ອຍຄຳຂອງພຣະເຈົ້າທີ່ແທ້ຈິງເພື່ອຈັດການກັບຂໍ້ບົກຜ່ອງຂອງຜູ້ຄົນ ແລະ ເພື່ອພິພາກສາ ແລະ ເປີດເຜີຍນິໄສທີ່ກະບົດຂອງພວກເຂົາ, ເຮັດໃຫ້ພວກເຂົາໄດ້ຮັບໃນສິ່ງທີ່ພວກເຂົາຕ້ອງການ ແລະ ສະແດງໃຫ້ພວກເຂົາເຫັນວ່າ ພຣະເຈົ້າໄດ້ມາທ່າມກາງມະນຸດ. ສິ່ງທີ່ສຳຄັນທີ່ສຸດ, ພາລະກິດທີ່ກະທຳໂດຍພຣະເຈົ້າທີ່ແທ້ຈິງ ແມ່ນການຊ່ວຍທຸກຄົນໃຫ້ອອກຈາກອິດທິພົນຂອງຊາຕານ, ນຳພວກເຂົາອອກຈາກດິນແດນແຫ່ງຄວາມສົກກະປົກ ແລະ ກຳຈັດນິໄສທີ່ເສື່ອມຊາມຂອງພວກເຂົາ. ຄວາມສຳຄັນທີ່ເລິກເຊິ່ງທີ່ສຸດໃນການຖືກຮັບເອົາໂດຍພຣະເຈົ້າທີ່ແທ້ຈິງແມ່ນການສາມາດດຳລົງຊີວິດໃນຄວາມເປັນມະນຸດທຳມະດາຮ່ວມກັບພຣະເຈົ້າທີ່ແທ້ຈິງໃຫ້ເປັນຕົວຢ່າງ ແລະ ເປັນແບບຢ່າງ, ສາມາດປະຕິບັດຕາມພຣະທຳ ແລະ ເງື່ອນໄຂທີ່ຈຳເປັນຂອງພຣະເຈົ້າທີ່ແທ້ຈິງ ໂດຍປາສະຈາກການບິດເບືອນ ຫຼື ການເຮັດຜິດແມ່ນແຕ່ໜ້ອຍດຽວ, ປະຕິບັດ ຕາມທຸກວິທີທີ່ພຣະອົງກ່າວໄວ້ ແລະ ສາມາດບັນລຸສິ່ງໃດກໍຕາມທີ່ພຣະອົງຮຽກຮ້ອງ. ດ້ວຍວິທີນີ້ ເຈົ້າຈະຖືກຮັບເອົາໂດຍພຣະເຈົ້າ. ເມື່ອເຈົ້າຖືກຮັບເອົາໂດຍພຣະເຈົ້າ ເຈົ້າບໍ່ພຽງແຕ່ຈະມີພາລະກິດຂອງພຣະວິນຍານບໍລິສຸດເທົ່ານັ້ນ, ແຕ່ຫຼັກໆແລ້ວ ເຈົ້າຈະສາມາດດຳລົງຊີວິດຕາມເງື່ອນໄຂທີ່ຈຳເປັນຂອງພຣະເຈົ້າທີ່ແທ້ຈິງໄດ້. ການທີ່ພຽງແຕ່ມີພາລະກິດຂອງພຣະວິນຍານບໍລິສຸດ ບໍ່ໄດ້ໝາຍຄວາມວ່າ ເຈົ້າມີຊີວິດຕາມເງື່ອນໄຂຂອງພຣະອົງ. ປະເດັນສຳຄັນກໍຄື ເຈົ້າຈະສາມາດປະຕິບັດຕາມເງື່ອນໄຂຈຳເປັນຂອງພຣະເຈົ້າທີ່ແທ້ຈິງ ທີ່ຮຽກຮ້ອງຈາກຕົວເຈົ້າໄດ້ ຫຼື ບໍ່ນັ້ນ ຂຶ້ນຢູ່ກັບວ່າ ເຈົ້າສາມາດທີ່ຈະຖືກຮັບໂດຍພຣະເຈົ້າ ຫຼື ບໍ. ນີ້ແມ່ນຄວາມໝາຍທີ່ຍິ່ງໃຫຍ່ສຸດຂອງພາລະກິດໃນເນື້ອໜັງຂອງພຣະເຈົ້າທີ່ແທ້ຈິງ. ນີ້ໝາຍຄວາມວ່າ ພຣະເຈົ້າໄດ້ຮັບເອົາກຸ່ມຄົນໂດຍການປາກົດຕົວໃນເນື້ອໜັງຢ່າງແທ້ຈິງ ແລະ ມີຊີວິດຊີວາຄືກັບຄົນທົ່ວໄປ, ຜູ້ຄົນເຫັນໄດ້, ປະຕິບັດພາລະກິດຂອງພຣະວິນຍານໃນເນື້ອໜັງຢ່າງແທ້ຈິງ

ແລະ ການປະຕິບັດຕົວເປັນຕົວຢ່າງໃຫ້ກັບຜູ້ຄົນທີ່ຢູ່ໃນເນື້ອໜັງ. ການມາຂອງພຣະເຈົ້າໃນເນື້ອໜັງ ຕົ້ນຕໍແລ້ວ ແມ່ນເພື່ອເຮັດໃຫ້ຜູ້ຄົນເຫັນການກະທຳທີ່ແທ້ຈິງຂອງພຣະເຈົ້າ, ເພື່ອມອບຮູບຮ່າງຝ່າຍເນື້ອໜັງແກ່ພຣະວິນຍານທີ່ບໍ່ມີຮູບຮ່າງ ແລະ ເພື່ອອະນຸຍາດໃຫ້ຜູ້ຄົນເຫັນ ແລະ ສຳຜັດພຣະອົງໄດ້. ດ້ວຍວິທີນີ້ ຄົນທີ່ຖືກພຣະອົງເຮັດໃຫ້ສົມບູນຈະດຳລົງຊີວິດຕາມພຣະອົງ, ຈະຖືກຮັບເອົາໂດຍພຣະອົງ ແລະ ຈະເປັນທີ່ພໍພະທັຍພຣະອົງ. ຖ້າພຣະເຈົ້າກ່າວແຕ່ຢູ່ໃນສະຫວັນ ແລະ ບໍ່ໄດ້ລົງມາເທິງແຜ່ນດິນໂລກຢ່າງແທ້ຈິງ ແລ້ວຜູ້ຄົນກໍຈະບໍ່ສາມາດຮູ້ຈັກພຣະເຈົ້າໄດ້ເທື່ອ, ພວກເຂົາພຽງແຕ່ຈະສາມາດເທດສະໜາກ່ຽວກັບການກະທຳຂອງພຣະເຈົ້າໂດຍໃຊ້ທິດສະດີທີ່ວ່າງເປົ່າ ແລະ ຈະບໍ່ມີພຣະທຳຂອງພຣະເຈົ້າທີ່ເປັນຄວາມຈິງເລີຍ. ພຣະເຈົ້າໄດ້ລົງມາເທິງແຜ່ນດິນໂລກ ຕົ້ນຕໍແລ້ວແມ່ນເພື່ອປະຕິບັດຕົນເປັນຕົວຢ່າງ ແລະ ແບບຢ່າງໃຫ້ກັບຄົນທີ່ພຣະອົງຈ້ອງຮັບເອົາ; ມີພຽງແຕ່ເມື່ອນັ້ນເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດຮູ້ຈັກພຣະເຈົ້າຢ່າງແທ້ຈິງ, ສາມາດສຳຜັດພຣະເຈົ້າ, ເຫັນພຣະອົງ ແລະ ພຽງເມື່ອນັ້ນ ພວກເຂົາຈຶ່ງຈະຖືກພຣະເຈົ້າຮັບເອົາຢ່າງແທ້ຈິງ.

# ການປະຕິບັດຄວາມຈິງເທົ່ານັ້ນຄືການມີຄວາມເປັນຈິງ

ການເຊີດຊູພຣະທຳຂອງພຣະເຈົ້າ ແລະ ການທີ່ສາມາດອະທິບາຍພຣະທຳເຫຼົ່ານັ້ນຢ່າງເປີດເຜີຍບໍ່ໄດ້ໝາຍຄວາມວ່າ ເຈົ້າຄອບຄອງຄວາມເປັນຈິງ. ມັນບໍ່ງ່າຍຄືດັ່ງທີ່ເຈົ້າຈິນຕະນາການໄວ້. ເຈົ້າຈະມີຄວາມເປັນຈິງ ຫຼື ບໍ່ມີຄວາມເປັນຈິງ ບໍ່ໄດ້ອີງຕາມສິ່ງທີ່ເຈົ້າເວົ້າ; ແຕ່ກົງກັນຂ້າມ ແມ່ນອີງຕາມສິ່ງທີ່ເຈົ້າດຳລົງຢູ່. ເມື່ອພຣະທຳຂອງພຣະເຈົ້າກາຍເປັນຊີວິດຂອງເຈົ້າ ແລະ ກາຍເປັນຖ້ອຍຄຳແບບທຳມະຊາດຂອງເຈົ້າ ນັ້ນສາມາດເວົ້າໄດ້ວ່າ ເຈົ້າມີຄວາມເປັນຈິງ ແລະ ພຽງເມື່ອນັ້ນເຈົ້າຈຶ່ງສາມາດຖືວ່າໄດ້ຮັບຄວາມເຂົ້າໃຈ ແລະ ໄດ້ຮັບວຸທິພາວະທີ່ແທ້ຈິງ. ເຈົ້າຕ້ອງສາມາດທົນຕໍ່ການກວດສອບໄລຍະຍາວ ແລະ ເຈົ້າຕ້ອງສາມາດດຳລົງຢູ່ຕາມພາບຫຼັກຂອງຄວາມຕ້ອງການຂອງພຣະເຈົ້າ. ນີ້ຕ້ອງບໍ່ແມ່ນພຽງແຕ່ການທຳທ່າເຮັດ ແຕ່ມັນຕ້ອງໄຫຼອອກມາຈາກເຈົ້າຢ່າງເປັນທຳມະຊາດ. ພຽງເມື່ອນັ້ນ ເຈົ້າຈຶ່ງຈະມີຄວາມເປັນຈິງຢ່າງແທ້ຈິງ ແລະ ພຽງເມື່ອນັ້ນ ເຈົ້າຈຶ່ງຈະໄດ້ຮັບຊີວິດ. ເຮົາຂໍຍົກການທົດລອງຂອງຂອງຜູ້ບໍລິການທີ່ທຸກຄົນຄຸ້ນເຄີຍມາເປັນຕົວຢ່າງ. ໃຜກໍສາມາດອະທິບາຍກ່ຽວກັບທິດສະດີທີ່ສູງສົ່ງກ່ຽວກັບຜູ້ບໍລິການໄດ້; ທຸກຄົນແມ່ນມີລະດັບຄວາມເຂົ້າໃຈທີ່ເໝາະສົມກ່ຽວກັບເລື່ອງດັ່ງກ່າວນີ້; ພວກເຂົາບັນຍາຍກ່ຽວກັບມັນ ແລະ ແຕ່ລະຄຳບັນຍາຍກໍເລີດເກີນກວ່າຄຳບັນຍາຍທີ່ຜ່ານມາ ຄືກັບວ່າ ນີ້ແມ່ນການແຂ່ງຂັນ. ຢ່າງໃດກໍຕາມ, ຖ້າມະນຸດບໍ່ໄດ້ຜ່ານການທົດລອງທີ່ສຳຄັນນີ້ ມັນກໍຍາກທີ່ຈະເວົ້າວ່າເຂົາມີຄຳພະຍານທີ່ດີ. ສະຫຼຸບກໍຄື ການດຳລົງຢູ່ຂອງມະນຸດແມ່ນຍັງຂາດເຂີນຫຼາຍ ແລະ ມັນບໍ່ສອດຄ່ອງກັບຄວາມເຂົ້າໃຈຂອງເຂົາເລີຍ. ດັ່ງນັ້ນ, ມັນຈຶ່ງຍັງບໍ່ໄດ້ກາຍເປັນວຸດທິພາວະທີ່ແທ້ຈິງຂອງມະນຸດ ແລະ ມັນກໍຍັງບໍ່ແມ່ນຊີວິດຂອງມະນຸດ. ຍ້ອນວ່າ ຄວາມເຂົ້າໃຈຂອງມະນຸດບໍ່ໄດ້ຖືກນຳເຂົ້າສູ່ຄວາມເປັນຈິງ, ວຸດທິພາວະຂອງເຂົາແມ່ນຍັງຄ້າຍຄືກັບຫໍຜາສາດທີ່ຖືກສ້າງຂຶ້ນຢູ່ເທິງດິນຊາຍ, ໄກວໄປມາ ແລະ ກຳລັງຈະເພພັງລົງ. ມະນຸດແມ່ນມີຄວາມເປັນຈິງໜ້ອຍເກີນໄປ; ມັນເກືອບເປັນໄປບໍ່ໄດ້ ທີ່ຈະຊອກຫາຄວາມເປັນຈິງໃດໆໃນມະນຸດ. ຄວາມເປັນຈິງ ທີ່ໄຫຼອອກຈາກມະນຸດໂດຍທຳມະຊາດແມ່ນມີໜ້ອຍເກີນໄປ ແລະ ຄວາມເປັນຈິງທັງໝົດທີ່ພວກເຂົາດຳລົງຢູ່ແມ່ນຖືກບັງຄັບ. ນີ້ແມ່ນເຫດຜົນທີ່ເຮົາເວົ້າວ່າ ມະນຸດບໍ່ມີຄວາມເປັນຈິງ. ເຖິງແມ່ນວ່າ ຜູ້ຄົນອ້າງວ່າ ຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າບໍ່ເຄີຍປ່ຽນແປງຈັກເທື່ອ, ນີ້ເປັນພຽງສິ່ງທີ່ພວກເຂົາເວົ້າກ່ອນທີ່ພວກເຂົາຈະຜະເຊີນກັບການທົດລອງ. ເມື່ອພວກເຂົາຜະເຊີນກັບການທົດລອງໃນມື້ໃດມື້ໜຶ່ງຢ່າງກະທັນຫັນ, ສິ່ງທີ່ພວກເຂົາເວົ້າເຖິງກໍຈະຕົກອອກຈາກບາດກ້າວຂອງຄວາມເປັນຈິງອີກຄັ້ງ ແລະ ນີ້ຈະພິສູດໃຫ້ເຫັນອີກຄັ້ງວ່າ ມະນຸດບໍ່ມີຄວາມເປັນຈິງ. ສາມາດເວົ້າໄດ້ວ່າ ເມື່ອໃດກໍຕາມທີ່ເຈົ້າຜະເຊີນກັບສິ່ງທີ່ບໍ່ເຂົ້າກັບຄວາມຄິດຂອງເຈົ້າ ແລະ ຕ້ອງການໃຫ້ເຈົ້າປ່ອຍປະຕົນເອງ, ສິ່ງເຫຼົ່ານັ້ນແມ່ນການທົດລອງຂອງເຈົ້າ. ກ່ອນຄວາມປະສົງຂອງພຣະເຈົ້າຈະຖືກເປີດເຜີຍ, ທຸກຄົນແມ່ນຜ່ານການທົດສອບຢ່າງຮຸນແຮງ ແລະ ການທົດລອງຢ່າງໜັກ. ເຈົ້າສາມາດເຂົ້າໃຈສິ່ງນີ້ບໍ? ໃນເວລາທີ່ພຣະເຈົ້າຕ້ອງການທົດລອງມະນຸດ, ພຣະອົງປ່ອຍໃຫ້ພວກເຂົາເລືອກດ້ວຍຕົວເອງສະເໝີ ກ່ອນທີ່ຄວາມຈິງຈະຖືກ

ເປີດເຜີຍ. ນີ້ໝາຍຄວາມວ່າ ເມື່ອພຣະເຈົ້າທົດລອງມະນຸດ, ພຣະອົງຈະບໍ່ບອກເຈົ້າຄວາມຈິງຈັກເທື່ອ; ນີ້ແມ່ນວິທີທີ່ຜູ້ຄົນຖືກເປີດເຜີຍ. ນີ້ແມ່ນວິທີໜຶ່ງ ທີ່ພຣະເຈົ້າດຳເນີນພາລະກິດຂອງພຣະອົງ ເພື່ອເບິ່ງວ່າ ເຈົ້າເຂົ້າໃຈພຣະເຈົ້າໃນປັດຈຸບັນ ຫຼື ບໍ່ ແລະ ເພື່ອເບິ່ງວ່າ ເຈົ້າມີຄວາມເປັນຈິງ ຫຼື ບໍ່. ເຈົ້າປາສະຈາກຂໍ້ສົງໄສກ່ຽວກັບພາລະກິດຂອງພຣະເຈົ້າຢ່າງແທ້ຈິງບໍ? ເຈົ້າຈະສາມາດຢືນຢ່າງໝັ້ນຄົງ ເມື່ອການທົດລອງທີ່ຍິ່ງໃຫຍ່ມາຮອດເຈົ້າໄດ້ບໍ? ໃຜກ້າເວົ້າວ່າ "ຂ້ານ້ອຍຮັບປະກັນວ່າ ຈະບໍ່ມີບັນຫາ"? ໃຜກ້າເວົ້າວ່າ "ຄົນອື່ນອາດຈະສົງໄສ ແຕ່ຂ້ານ້ອຍຈະບໍ່ມີວັນສົງໄສ"? ມັນຄ້າຍຄືກັບເມື່ອເປໂຕຖືກທົດລອງ: ລາວເວົ້າໃຫຍ່ສະເໝີກ່ອນຄວາມຈິງຈະຖືກເປີດເຜີຍ. ນີ້ບໍ່ແມ່ນຂໍ້ຜິດພາດສະເພາະສ່ວນຕົວຂອງເປໂຕ; ນີ້ແມ່ນຄວາມລຳບາກທີ່ຍິ່ງໃຫຍ່ທີ່ມະນຸດທຸກຄົນໃນປັດຈຸບັນຕ້ອງຜະເຊີນ. ຖ້າເຮົາໄປຢ້ຽມຢາມຫຼາຍບ່ອນ ຫຼື ຖ້າເຮົາໄປຢ້ຽມຢາມອ້າຍເອື້ອຍນ້ອງຫຼາຍຄົນ ເພື່ອເບິ່ງວ່າ ແມ່ນຫຍັງຄືຄວາມເຂົ້າໃຈຂອງພວກເຈົ້າກ່ຽວກັບພາລະກິດໃນປັດຈຸບັນຂອງພຣະເຈົ້າ, ພວກເຈົ້າຈະສາມາດເວົ້າຫຼາຍຢ່າງກ່ຽວກັບຄວາມເຂົ້າໃຈຂອງພວກເຈົ້າຢ່າງແນ່ນອນ ແລະ ມັນກໍຈະປາກົດວ່າ ພວກເຈົ້າບໍ່ມີຂໍ້ສົງໄສຫຍັງເລີຍ. ຖ້າເຮົາຕ້ອງຖາມເຈົ້າວ່າ: "ເຈົ້າສາມາດຕັດສິນວ່າ ພຣະເຈົ້າເປັນຜູ້ປະຕິບັດພາລະກິດໃນປັດຈຸບັນດ້ວຍພຣະອົງເອງແທ້ບໍ? ບໍ່ມີຂໍ້ສົງໄສຫຍັງບໍ?" ແນ່ນອນຢູ່ແລ້ວ ເຈົ້າກໍຈະຕອບວ່າ: "ບໍ່ມີຂໍ້ສົງໄສຫຍັງເລີຍ, ມັນແມ່ນພາລະກິດທີ່ປະຕິບັດໂດຍພຣະວິນຍານຂອງພຣະເຈົ້າ". ເມື່ອເຈົ້າໄດ້ຕອບຄຳຖາມດ້ວຍວິທີດັ່ງກ່າວນີ້, ແນ່ນອນ ເຈົ້າຈະບໍ່ສົງໄສອີກ ແລະ ເຈົ້າອາດຈະຍັງຮູ້ສຶກມີຄວາມສຸກຫຼາຍ, ຄິດວ່າຕົນເອງໄດ້ຮັບຄວາມເປັນຈິງຢ່າງຫຼວງຫຼາຍ. ຜູ້ທີ່ມັກເຂົ້າໃຈສິ່ງຕ່າງໆໃນລັກສະນະນີ້ ແມ່ນຜູ້ທີ່ມີຄວາມເປັນຈິງໜ້ອຍຫຼາຍ; ຍິ່ງຄົນໆໜຶ່ງຄິດວ່າຕົນເອງໄດ້ຮັບມັນ ຄົນໆນັ້ນກໍຍິ່ງບໍ່ສາມາດຢືນຢ່າງໝັ້ນຄົງເມື່ອຜະເຊີນກັບການທົດລອງ. ຂໍໃຫ້ຄົນທີ່ອວດດີ ແລະ ຈອງຫອງພົບແຕ່ຄວາມໂສກເສົ້າ ແລະ ຂໍໃຫ້ຜູ້ທີ່ບໍ່ມີຄວາມຮູ້ກ່ຽວກັບຕົວເອງພົບແຕ່ຄວາມໂສກເສົ້າ; ເພາະຄົນດັ່ງກ່າວແມ່ນເກັ່ງແຕ່ເວົ້າ ແຕ່ຂີ້ຮ້າຍທີ່ສຸດໃນການນຳເອົາຄຳເວົ້າຂອງເຂົາໄປປະຕິບັດ. ເມື່ອມີຄວາມຫຍຸ້ງຍາກພຽງເລັກນ້ອຍ, ຄົນເຫຼົ່ານີ້ກໍຈະເລີ່ມມີຂໍ້ສົງໄສ ແລະ ຄວາມຄິດລົ້ມເລີກກໍເລືອເຂົ້າສູ່ສະໝອງຂອງພວກເຂົາ. ພວກເຂົາບໍ່ມີຄວາມເປັນຈິງໃດໆເລີຍ; ພວກເຂົາມີພຽງທິດສະດີທີ່ນອກເໜືອສາສະໜາ ໂດຍປາສະຈາກຄວາມເປັນຈິງທີ່ພຣະເຈົ້າຮຽກຮ້ອງຕ້ອງການໃນປັດຈຸບັນ. ເຮົາລັງກຽດຄົນທີ່ເວົ້າແຕ່ທິດສະດີ ແລະ ບໍ່ມີຄວາມເປັນຈິງທີ່ສຸດ. ພວກເຂົາຮ້ອງສຽງດັງທີ່ສຸດໃນເວລາດຳເນີນພາລະກິດຂອງພວກເຂົາ ແຕ່ທັນທີໃດທີ່ພວກເຂົາຜະເຊີນກັບຄວາມເປັນຈິງ ພວກເຂົາກໍລົ້ມເຫຼວ. ນີ້ບໍ່ໄດ້ສະແດງໃຫ້ເຫັນວ່າ ຜູ້ຄົນເຫຼົ່ານີ້ບໍ່ມີຄວາມເປັນຈິງບໍ? ບໍ່ວ່າລົມ ແລະ ຄື້ນທະເລຈະຮຸນແຮງສໍ່າໃດກໍຕາມ, ຖ້າເຈົ້າຍັງສາມາດຢືນຢູ່ໂດຍບໍ່ມີຂໍ້ສົງໄສໃດໆໃນສະໝອງຂອງເຈົ້າ ແລະ ເຈົ້າສາມາດຢືນຢ່າງໝັ້ນຄົງ ແລະ ບໍ່ມີການປະຕິເສດເຖິງແມ່ນວ່າຈະບໍ່ມີໃຜຍັງຄົງເຫຼືອຢູ່ກໍຕາມ, ແລ້ວເຈົ້າກໍຈະຖືວ່າມີຄວາມເຂົ້າໃຈຢ່າງແທ້ຈິງ ແລະ ມີຄວາມເປັນຈິງທີ່ແທ້ຈິງ. ຖ້າເຈົ້າຫັນຕາມທິດທາງຂອງລົມ, ຖ້າເຈົ້າເດີນຕາມຄົນສ່ວນໃຫຍ່ ແລະ ຮຽນເວົ້າຕາມຄວາມເວົ້າຂອງຜູ້ອື່ນ, ບໍ່ວ່າເຈົ້າຈະອວດດີສໍ່າໃດກໍຕາມ, ມັນກໍຈະບໍ່ໄດ້ພິສູດວ່າ ເຈົ້າມີຄວາມເປັນຈິງ. ດັ່ງນັ້ນ, ເຮົາຂໍແນະນຳວ່າ ເຈົ້າຈິ່ງຢ່າຟ້າວຮ້ອງດ້ວຍຄຳເວົ້າທີ່ວ່າງເປົ່າໄວເກີນໄປ. ເຈົ້າ

ຮູ້ຈັກສິ່ງທີ່ພຣະເຈົ້າຈະປະຕິບັດບໍ? ຢ່າປະພຶດຕົນຄືກັບເປໂຕອີກຄົນ ເພາະຢ້ານວ່າ ເຈົ້າຈະນຳເອົາຄວາມອັບອາຍມາສູ່ຕົວເອງ ແລະ ເຈົ້າຈະບໍ່ສາມາດເງີຍຫົວຂຶ້ນສູງໄດ້; ສິ່ງນີ້ຈະບໍ່ເປັນປະໂຫຍດໃຫ້ກັບໃຜເລີຍ. ມະນຸດສ່ວນໃຫຍ່ບໍ່ມີວຸດທິພາວະທີ່ແທ້ຈິງ. ເຖິງແມ່ນວ່າ ພຣະເຈົ້າໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍ ແຕ່ພຣະອົງບໍ່ໄດ້ນຳຄວາມເປັນຈິງມາສູ່ຜູ້ຄົນ; ໃຫ້ຖືວ່ານີ້ກໍຄື ພຣະອົງບໍ່ເຄີຍຂ້ຽນຕີຜູ້ໃດດ້ວຍຕົວພຣະອົງເອງຈັກເທື່ອ. ບາງຄົນຖືກເປີດເຜີຍໂດຍການທົດລອງດັ່ງກ່າວ, ດ້ວຍມືແຫ່ງຄວາມບາບຂອງພວກເຂົາຍື່ໄກອອກ ແລະ ໄກອອກ ໂດຍຄິດວ່າມັນງ່າຍທີ່ຈະເອົາຊະນະພຣະເຈົ້າ ແລະ ຄິດວ່າພວກເຂົາສາມາດເຮັດສິ່ງໃດກໍຕາມທີ່ພວກເຂົາຕ້ອງການ. ໃນເມື່ອພວກເຂົາບໍ່ສາມາດທົນແມ່ນແຕ່ກັບການທົດລອງປະເພດນີ້, ການທົດລອງທີ່ທ້າທາຍກວ່ານີ້ແມ່ນບໍ່ມີທາງທີ່ພວກເຂົາຈະທົນໄດ້ ແລະ ການມີຄວາມເປັນຈິງກໍເຊັ່ນກັນ. ພວກເຂົາບໍ່ແມ່ນພະຍາຍາມຫຼອກລວງພຣະເຈົ້າເທົ່ານັ້ນບໍ? ການມີຄວາມເປັນຈິງບໍ່ແມ່ນສິ່ງທີ່ສາມາດປອມແປງໄດ້ ຫຼື ຄວາມເປັນຈິງບໍ່ແມ່ນສິ່ງທີ່ເຈົ້າສາມາດໄດ້ຮັບໂດຍການຮູ້ຈັກມັນ. ມັນອີງຕາມວຸດທິພາວະແທ້ຈິງຂອງເຈົ້າ ແລະ ອີງຕາມວ່າ ເຈົ້າສາມາດທົນຕໍ່ການທົດລອງທັງໝົດໄດ້ ຫຼື ບໍ່. ເຈົ້າເຂົ້າໃຈບໍ່?

ພຣະເຈົ້າບໍ່ໄດ້ຕ້ອງການໃຫ້ຜູ້ຄົນມີ ພຽງແຕ່ຄວາມສາມາດໃນການເວົ້າກ່ຽວກັບ ຄວາມເປັນຈິງ. ນັ້ນຈະງ່າຍເກີນໄປ ບໍ່ແມ່ນບໍ? ແລ້ວເປັນຫຍັງພຣະເຈົ້າຈຶ່ງເວົ້າກ່ຽວກັບການເຂົ້າສູ່ຊີວິດ? ເປັນຫຍັງພຣະອົງຈຶ່ງເວົ້າກ່ຽວກັບການປ່ຽນແປງ? ຖ້າຜູ້ຄົນພຽງແຕ່ສາມາດເວົ້າປາກເປົ່າກ່ຽວກັບຄວາມຈິງແລ້ວພວກເຂົາສາມາດປ່ຽນແປງອຸປະນິໄສຂອງພວກເຂົາໄດ້ບໍ? ທະຫານທີ່ດີຂອງອານາຈັກ ບໍ່ໄດ້ຖືກເຝິກໃຫ້ເປັນກຸ່ມຄົນທີ່ສາມາດພຽງແຕ່ເວົ້າກ່ຽວກັບຄວາມເປັນຈິງ ຫຼື ເປັນຄົນທີ່ໂອ້ອວດເທົ່ານັ້ນ ແຕ່ກົງກັນຂ້າມ ພວກເຂົາຖືກເຝິກໃຫ້ດຳລົງຢູ່ໃນພຣະທຳຂອງພຣະເຈົ້າຕະຫຼອດເວລາ, ເປັນຜູ້ເດັດດ່ຽວ ບໍ່ວ່າພວກເຂົາຈະພົບກັບຄວາມລົ້ມເຫຼວ ແລະ ດຳເນີນຊີວິດຕາມພຣະທຳຂອງພຣະເຈົ້າຕະຫຼອດເວລາ ແລະ ບໍ່ກັບຄືນໄປສູ່ຝ່າຍໂລກ. ນີ້ແມ່ນຄວາມເປັນຈິງທີ່ພຣະເຈົ້າກ່າວເຖິງ ແລະ ນີ້ແມ່ນຄວາມຕ້ອງການຂອງພຣະເຈົ້າທີ່ມີຕໍ່ມະນຸດ. ດັ່ງນັ້ນ, ຢ່າເບິ່ງຄວາມເປັນຈິງທີ່ພຣະເຈົ້າກ່າວເປັນສິ່ງທີ່ທຳມະດາເກີນໄປ. ການມີພຽງແຕ່ແສງສະຫວ່າງຂອງພຣະວິນຍານບໍລິສຸດ ບໍ່ໄດ້ເທົ່າກັບການມີຄວາມເປັນຈິງ: ນີ້ບໍ່ແມ່ນວຸດທິພາວະຂອງມະນຸດ ແຕ່ເປັນພຣະຄຸນຂອງພຣະເຈົ້າ ເຊິ່ງມະນຸດບໍ່ໄດ້ປະກອບສ່ວນຫຍັງເລີຍ. ມະນຸດແຕ່ລະຄົນຕ້ອງທົນທຸກແບບເປໂຕ ແລະ ຍິ່ງໄປກວ່ານັ້ນ ກໍຕ້ອງມີສະຫງ່າລາສີຂອງເປໂຕເຊິ່ງພວກເຂົາຕ້ອງດຳລົງຢູ່ຫຼັງຈາກທີ່ພວກເຂົາໄດ້ຮັບພາລະກິດຂອງພຣະເຈົ້າ. ມີແຕ່ສິ່ງນີ້ເທົ່ານັ້ນທີ່ສາມາດເອີ້ນວ່າ ຄວາມເປັນຈິງ. ຢ່າຄິດວ່າ ເຈົ້າມີຄວາມເປັນຈິງ ຍ້ອນເຈົ້າສາມາດເວົ້າກ່ຽວກັບຄວາມເປັນຈິງ. ນີ້ແມ່ນຄວາມຄິດທີ່ຜິດ. ຄວາມຄິດດັ່ງກ່າວບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ ແລະ ບໍ່ມີຄວາມໝາຍທີ່ແທ້ຈິງ. ຈົ່ງຢ່າເວົ້າສິ່ງດັ່ງກ່າວໃນອະນາຄົດ. ຈົ່ງຢຸດການເວົ້າແບບນັ້ນ! ທຸກຄົນທີ່ມີຄວາມເຂົ້າໃຈຜິດກ່ຽວກັບພຣະທຳຂອງພຣະເຈົ້າຄືຜູ້ທີ່ບໍ່ມີຄວາມເຊື່ອ. ພວກເຂົາບໍ່ມີຄວາມຮູ້ທີ່ແທ້ຈິງ ແລະ ແຮງໄກທີ່ຈະມີວຸດທິພາວະທີ່ແທ້ຈິງ; ພວກເຂົາແມ່ນຄົນໂງ່ທີ່ປາສະຈາກຄວາມເປັນຈິງ. ເວົ້າອີກຢ່າງກໍຄື ທຸກຄົນທີ່ດຳລົງຊີວິດຢູ່ນອກແກ່ນສານຂອງພຣະທຳຂອງພຣະເຈົ້າ ແມ່ນຜູ້ທີ່

ບໍ່ມີຄວາມເຊື່ອ. ຜູ້ທີ່ມະນຸດຖືວ່າ ເປັນຜູ້ທີ່ບໍ່ມີຄວາມເຊື່ອ ແມ່ນສັດຮ້າຍໃນສາຍຕາຂອງພຣະເຈົ້າ ແລະ ຜູ້ທີ່ພຣະເຈົ້າຖືວ່າ ເປັນຜູ້ທີ່ບໍ່ມີຄວາມເຊື່ອ ແມ່ນຜູ້ທີ່ບໍ່ມີພຣະທຳຂອງພຣະເຈົ້າໃນຊີວິດຂອງພວກເຂົາ. ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ຜູ້ທີ່ບໍ່ມີຄວາມເປັນຈິງຂອງພຣະທຳຂອງພຣະເຈົ້າ ແລະ ຜູ້ທີ່ບໍ່ສາມາດດຳລົງຊີວິດຢູ່ໃນພຣະທຳຂອງພຣະເຈົ້າແມ່ນຜູ້ທີ່ບໍ່ມີຄວາມເຊື່ອ. ເຈດຕະນາຂອງພຣະເຈົ້າແມ່ນເພື່ອເຮັດໃຫ້ ທຸກຄົນດຳລົງຊີວິດຢູ່ກັບຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ, ບໍ່ແມ່ນພຽງແຕ່ວ່າໃຫ້ ທຸກຄົນສາມາດເວົ້າກ່ຽວກັບຄວາມເປັນຈິງໄດ້ເທົ່ານັ້ນ, ແຕ່ສຳຄັນໄປກວ່ານັ້ນ ແມ່ນເພື່ອໃຫ້ທຸກຄົນສາມາດດຳລົງຊີວິດຢູ່ກັບຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ. ຄວາມເປັນຈິງທີ່ມະນຸດເຫັນແມ່ນຜິວເຜີນເກີນໄປ, ມັນບໍ່ມີຄຸນຄ່າ ແລະ ບໍ່ສາມາດບັນລຸຄວາມປະສົງຂອງພຣະເຈົ້າໄດ້. ມັນຕໍ່າຕ້ອຍຫຼາຍ ແລະ ບໍ່ມີຄ່າແມ່ນແຕ່ໃຫ້ກ່າວເຖິງ. ມັນຂາດແຄນຫຼາຍ ແລະ ຫ່າງໄກຫຼາຍຈາກມາດຕະຖານຂອງຄວາມຕ້ອງການຂອງພຣະເຈົ້າ. ພວກເຈົ້າແຕ່ລະຄົນຈະຖືກກວດກາຢ່າງໃຫຍ່ ເພື່ອເບິ່ງວ່າ ຜູ້ໃດທ່າມກາງພວກເຈົ້າທີ່ຮູ້ພຽງແຕ່ເວົ້າກ່ຽວກັບຄວາມເຂົ້າໃຈຂອງເຈົ້າເທົ່ານັ້ນ ແຕ່ບໍ່ສາມາດຊີ້ໃຫ້ເຫັນເສັ້ນທາງ ແລະ ພ້ອມນັ້ນ ກໍເພື່ອຄົ້ນເບິ່ງວ່າ ຜູ້ໃດໃນພວກເຈົ້າທີ່ເປັນຄົນບໍ່ມີຄ່າຄືກັບຂີ້ເຫຍື້ອ. ນັບຕັ້ງແຕ່ນີ້ໄປ ຈົ່ງຈົດຈຳສິ່ງນີ້ໄວ້! ຢ່າເວົ້າກ່ຽວກັບຄວາມຮູ້ທີ່ວ່າງເປົ່າ. ໃຫ້ເວົ້າກ່ຽວກັບເສັ້ນທາງໃນການປະຕິບັດ ແລະ ກ່ຽວກັບຄວາມເປັນຈິງເທົ່ານັ້ນ. ການປ່ຽນແປງຈາກຄວາມຮູ້ທີ່ແທ້ຈິງໄປເປັນການປະຕິບັດທີ່ແທ້ຈິງ ແລະ ຫຼັງຈາກນັ້ນ ກໍປ່ຽນແປງຈາກການປະຕິບັດໄປເປັນການດຳລົງຊີວິດຢູ່ກັບຄວາມເປັນຈິງ. ຢ່າໄປສັ່ງສອນຄົນອື່ນ ແລະ ຢ່າເວົ້າກ່ຽວກັບຄວາມຮູ້ທີ່ແທ້ຈິງ. ຖ້າຄວາມເຂົ້າໃຈຂອງເຈົ້າແມ່ນເສັ້ນທາງ, ແລ້ວຈົ່ງປ່ອຍຄຳເວົ້າຂອງເຈົ້າອອກມາຕາມສະບາຍ; ຖ້າມັນບໍ່ແມ່ນເສັ້ນທາງ ກໍຈົ່ງກະລຸນາມິດງຽບ ແລະ ຢຸດເວົ້າ. ສິ່ງທີ່ເຈົ້າເວົ້າແມ່ນບໍ່ມີປະໂຫຍດ. ເຈົ້າເວົ້າກ່ຽວກັບຄວາມເຂົ້າໃຈເພື່ອຫຼອກລວງພຣະເຈົ້າ ແລະ ເພື່ອເຮັດໃຫ້ຄົນອື່ນອິດສາເຈົ້າ. ນັ້ນບໍ່ແມ່ນຄວາມທະເຍີທະຍານຂອງເຈົ້າບໍ? ນີ້ບໍ່ແມ່ນການຕັ້ງໃຈລໍ້ຫຼິ້ນກັບຜູ້ອື່ນບໍ? ແລ້ວມັນມີຄຸນຄ່າໃນສິ່ງນີ້ບໍ່? ຖ້າເຈົ້າເວົ້າກ່ຽວກັບຄວາມເຂົ້າໃຈຫຼັງຈາກທີ່ເຈົ້າໄດ້ປະສົບກັບມັນ, ເຈົ້າຈະບໍ່ເວົ້າໂອ້ອວດອີກຕໍ່ໄປ. ບໍ່ສະນັ້ນ ເຈົ້າຈະເປັນຄົນທີ່ເວົ້າດ້ວຍຄຳເວົ້າທີ່ໂອ້ອວດ. ມີຫຼາຍສິ່ງໃນປະສົບການຕົວຈິງຂອງເຈົ້າທີ່ເຈົ້າບໍ່ສາມາດເອົາຊະນະໄດ້ ແລະ ເຈົ້າບໍ່ສາມາດ ຕໍ່ຕ້ານເນື້ອໜັງຂອງຕົວເອງໄດ້; ເຈົ້າເຮັດໃນສິ່ງທີ່ເຈົ້າຕ້ອງການສະເໝີ ໂດຍບໍ່ເຄີຍເຮັດຕາມຄວາມປະສົງຂອງພຣະເຈົ້າ ແຕ່ເຖິງຢ່າງນັ້ນ ເຈົ້າກໍຍັງມີຄວາມໜ້າດ້ານທີ່ຈະເວົ້າກ່ຽວກັບຄວາມເຂົ້າໃຈທາງທິດສະດີ. ຈັ່ງແມ່ນເຈົ້າບໍ່ມີຢາງອາຍ! ເຈົ້າຍັງໜ້າດ້ານທີ່ຈະເວົ້າກ່ຽວກັບຄວາມເຂົ້າໃຈຂອງເຈົ້າໃນພຣະທຳຂອງພຣະເຈົ້າ. ຈັ່ງແມ່ນເຈົ້າບໍ່ອາຍແທ້ໆ! ການກ່າວປາໄສ ແລະ ການເວົ້າໂອ້ອວດໄດ້ກາຍເປັນທຳມະຊາດຂອງເຈົ້າ ແລະ ເຈົ້າໄດ້ຄຸ້ນເຄີຍກັບການເຮັດສິ່ງນີ້. ເມື່ອໃດກໍຕາມທີ່ເຈົ້າຕ້ອງການຢາກເວົ້າ, ເຈົ້າກໍເວົ້າຢ່າງສະບາຍໃຈ, ແຕ່ເມື່ອເຖິງເວລາປະຕິບັດ ເຈົ້າກໍເອົາໃຈໃສ່ແຕ່ກັບເຄື່ອງປະດັບປະດາ. ນີ້ບໍ່ແມ່ນວິທີການຫຼອກລວງຄົນອື່ນບໍ? ເຈົ້າອາດຈະສາມາດຫຼອກລວງມະນຸດໄດ້ ແຕ່ບໍ່ສາມາດຫຼອກລວງພຣະເຈົ້າໄດ້. ມະນຸດບໍ່ຮູ້ ແລະ ບໍ່ມີການຢັ່ງຮູ້ ແຕ່ພຣະເຈົ້າຈິງຈັງກ່ຽວກັບບັນຫາດັ່ງກ່າວ ແລະ ພຣະອົງຈະບໍ່ລະເວັ້ນເຈົ້າ. ອ້າຍເອື້ອຍນ້ອງຂອງເຈົ້າອາດຈະສົ່ງເສີມເຈົ້າ, ຍົກຍ້ອງຄວາມເຂົ້າໃຈຂອງເຈົ້າ,

ຊົມເຊີຍເຈົ້າ ແຕ່ຖ້າເຈົ້າບໍ່ມີຄວາມເປັນຈິງ, ພຣະວິນຍານບໍລິສຸດກໍຈະບໍ່ລະເວັ້ນເຈົ້າ. ບາງເທື່ອພຣະເຈົ້າທີ່ແທ້ຈິງຈະບໍ່ຊອກຫາຂໍ້ບົກຜ່ອງຂອງເຈົ້າ ແຕ່ພຣະວິນຍານຂອງພຣະເຈົ້າຈະເບິ່ງຂ້າມເຈົ້າ ແລະ ນັ້ນກໍພຽງພໍທີ່ຈະເຮັດໃຫ້ເຈົ້າຍາກທີ່ຈະທົນຮັບໄດ້. ເຈົ້າເຊື່ອໃນສິ່ງນີ້ບໍ? ຈົ່ງເວົ້າຫຼາຍໆກ່ຽວກັບຄວາມເປັນຈິງໃນການປະຕິບັດ; ເຈົ້າລືມມັນແລ້ວບໍ? ຈົ່ງເວົ້າຫຼາຍໆກ່ຽວກັບເສັ້ນທາງທີ່ແທ້ຈິງ; ເຈົ້າລືມມັນແລ້ວບໍ? "ຈົ່ງເວົ້າກ່ຽວກັບທິດສະດີທີ່ສູງສົ່ງ, ຄຳເວົ້າໃຫຍ່ ແລະ ບໍ່ມີຄ່າໃຫ້ໜ້ອຍລົງ; ມັນດີທີ່ສຸດທີ່ຈະເລີ່ມປະຕິບັດແຕ່ດຽວນີ້ເລີຍ". ເຈົ້າລືມພຣະທຳເຫຼົ່ານີ້ແລ້ວບໍ? ເຈົ້າບໍ່ເຂົ້າໃຈເລີຍບໍ? ເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບຄວາມປະສົງຂອງພຣະເຈົ້າບໍ?

# ການຮູ້ຈັກພາລະກິດຂອງພຣະເຈົ້າໃນປັດຈຸບັນ

ສ່ວນໃຫຍ່ແລ້ວ, ການຮູ້ຈັກພາລະກິດຂອງພຣະເຈົ້າໃນຍຸກປັດຈຸບັນນີ້ແມ່ນການຮູ້ຈັກພັນທະກິດທີ່ສຳຄັນຂອງພຣະເຈົ້າທີ່ມາບັງເກີດເປັນມະນຸດໃນຍຸກສຸດທ້າຍ ແລະ ເລື່ອງທີ່ພຣະອົງໄດ້ລົງມາເພື່ອປະຕິບັດພາລະກິດຢູ່ເທິງແຜ່ນດິນໂລກ. ກ່ອນໜ້ານີ້ ເຮົາໄດ້ກ່າວໄວ້ໃນພຣະທຳຂອງເຮົາແລ້ວວ່າພຣະເຈົ້າໄດ້ລົງມາເທິງແຜ່ນດິນໂລກ (ໃນຊ່ວງຍຸກສຸດທ້າຍ) ເພື່ອວາງແບບຢ່າງກ່ອນທີ່ຈະຈາກໄປ. ພຣະເຈົ້າວາງແບບຢ່າງນີ້ແນວໃດ? ພຣະອົງກະທຳດັ່ງນັ້ນໂດຍການກ່າວພຣະທຳ ແລະ ໂດຍການປະຕິບັດພາລະກິດ ແລະ ການກ່າວໄປທົ່ວແຜ່ນດິນ. ນີ້ຄືພາລະກິດຂອງພຣະເຈົ້າໃນຊ່ວງຍຸກສຸດທ້າຍ; ພຣະອົງພຽງແຕ່ກ່າວ ເພື່ອເຮັດໃຫ້ແຜ່ນດິນໂລກກາຍມາເປັນໂລກແຫ່ງພຣະທຳ, ເພື່ອວ່າທຸກຄົນຈະໄດ້ຮັບການຈັດຕຽມ ແລະ ໄດ້ຮັບຄວາມສະຫວ່າງຈາກພຣະທຳຂອງພຣະອົງ ແລະ ເພື່ອວ່າວິນຍານຂອງມະນຸດຈະໄດ້ຕື່ນຂຶ້ນ ແລະ ເຂົາຈະໄດ້ຮັບຄວາມຊັດເຈນກ່ຽວກັບນິມິດ. ໃນຊ່ວງຍຸກສຸດທ້າຍ, ພຣະເຈົ້າຜູ້ບັງເກີດເປັນມະນຸດ ໄດ້ລົງມາເທິງແຜ່ນດິນໂລກເພື່ອກ່າວພຣະທຳໂດຍສະເພາະ. ເມື່ອພຣະເຢຊູມາ, ພຣະອົງເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນ ແລະ ພຣະອົງສຳເລັດພາລະກິດແຫ່ງການໄຖ່ບາບໂດຍການຖືກຄຶງທີ່ໄມ້ກາງແຂນ. ພຣະອົງໄດ້ນຳຈຸດຈົບມາຍັງຍຸກແຫ່ງພຣະບັນຍັດ ແລະ ລຶບລ້າງສິ່ງເກົ່າທັງໝົດ. ການມາຂອງພຣະເຢຊູໄດ້ສິ້ນສຸດຍຸກແຫ່ງພຣະບັນຍັດ ແລະ ເລີ່ມຕົ້ນຍຸກແຫ່ງພຣະຄຸນ; ການມາຂອງພຣະເຈົ້າຜູ້ບັງເກີດເປັນມະນຸດໃນຍຸກສຸດທ້າຍໄດ້ນຳຈຸດຈົບມາຍັງຍຸກແຫ່ງພຣະຄຸນ. ພຣະອົງໄດ້ມາເພື່ອກ່າວພຣະທຳຂອງພຣະອົງໂດຍສະເພາະ, ເພື່ອໃຊ້ພຣະທຳໃນການເຮັດໃຫ້ມະນຸດສົມບູນ, ເພື່ອເຍືອງທາງ ແລະ ໃຫ້ແສງສະຫວ່າງກັບມະນຸດ ແລະ ເພື່ອກຳຈັດບ່ອນຂອງພຣະເຈົ້າທີ່ເລື່ອນລອຍອອກຈາກຫົວໃຈຂອງມະນຸດ. ນີ້ບໍ່ແມ່ນຂັ້ນຕອນຂອງພາລະກິດທີ່ພຣະເຢຊູປະຕິບັດເມື່ອເວລາພຣະອົງມາ. ເມື່ອພຣະເຢຊູມາ, ພຣະອົງໄດ້ກະທຳການອັດສະຈັນຫຼາຍຢ່າງ, ພຣະອົງຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ແລະ ພຣະອົງປະຕິບັດພາລະກິດແຫ່ງການໄຖ່ບາບໂດຍການຖືກຄຶງທີ່ໄມ້ກາງແຂນ. ຜົນຕາມມາກໍຄື ໃນແນວຄວາມຄິດຂອງຜູ້ຄົນ, ພວກເຂົາເຊື່ອວ່າ ນີ້ແມ່ນສິ່ງທີ່ພຣະເຈົ້າຄວນເປັນ. ຍ້ອນວ່າ ເມື່ອພຣະເຢຊູມາ, ພຣະອົງບໍ່ໄດ້ປະຕິບັດພາລະກິດແຫ່ງການກຳຈັດພາບລັກຂອງພຣະເຈົ້າທີ່ເລື່ອນລອຍອອກຈາກຫົວໃຈຂອງມະນຸດ; ເມື່ອພຣະອົງມາ, ພຣະອົງຖືກຄຶງໃສ່ໄມ້ກາງແຂນ, ພຣະອົງຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ແລະ ພຣະອົງເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນ. ສ່ວນເລື່ອງກ່ຽວກັບການລົງມາບັງເກີດເປັນມະນຸດຂອງພຣະເຈົ້າໃນຊ່ວງຍຸກສຸດທ້າຍນີ້ ແມ່ນເພື່ອກຳຈັດບ່ອນທີ່ຖືກຄອບງຳໂດຍພຣະເຈົ້າທີ່ເລື່ອນລອຍ ທີ່ຢູ່ໃນແນວຄວາມຄິດຂອງມະນຸດ ເພື່ອວ່າຈະບໍ່ມີພາບຂອງພຣະເຈົ້າທີ່ເລື່ອນລອຍໃນຫົວໃຈຂອງມະນຸດອີກຕໍ່ໄປ. ໂດຍຜ່ານພຣະທຳທີ່ແທ້ຈິງ ແລະ ພາລະກິດທີ່ແທ້ຈິງຂອງພຣະອົງ, ການເຄື່ອນໄຫວຂອງພຣະອົງທົ່ວແຜ່ນດິນ, ພາລະກິດທີ່ພິເສດ ແລະ ປົກກະຕິຂອງພຣະອົງ ທີ່ພຣະອົງໄດ້ປະຕິບັດທ່າມກາງມະນຸດ, ພຣະອົງເຮັດໃຫ້ມະນຸດມາຮູ້ຈັກຄວາມເປັນຈິງຂອງພຣະເຈົ້າ ແລະ ກຳຈັດບ່ອນຂອງພຣະເຈົ້າທີ່ເລື່ອນລອຍອອກ

ຈາກຫົວໃຈຂອງມະນຸດ. ອີກດ້ານໜຶ່ງກໍຄື ພຣະເຈົ້າໃຊ້ພຣະທຳທີ່ກ່າວໂດຍເນື້ອໜັງຂອງພຣະອົງເພື່ອເຮັດໃຫ້ມະນຸດສົມບູນ ແລະ ເຮັດໃຫ້ທຸກສິ່ງສຳເລັດລົງ. ນີ້ແມ່ນພາລະກິດທີ່ພຣະເຈົ້າຈະເຮັດໃຫ້ສຳເລັດໃນຍຸກສຸດທ້າຍນີ້.

ສິ່ງທີ່ພວກເຈົ້າຕ້ອງຮູ້:

1. ພາລະກິດຂອງພຣະເຈົ້າບໍ່ແມ່ນສິ່ງທີ່ເກີນທຳມະຊາດ ແລະ ພວກເຈົ້າບໍ່ຄວນເຊື່ອງຊ້ອນແນວຄວາມຄິດຕ່າງໆກ່ຽວກັບພາລະກິດຂອງພຣະອົງ.
2. ພວກເຈົ້າຕ້ອງເຂົ້າໃຈຈຸດສຳຄັນຂອງພາລະກິດທີ່ພຣະເຈົ້າຜູ້ມາບັງເກີດເປັນມະນຸດໄດ້ລົງມາເພື່ອປະຕິບັດໃນເວລານີ້.

ພຣະອົງບໍ່ໄດ້ມາເພື່ອຮັກສາຄົນປ່ວຍ ຫຼື ຂັບໄລ່ຜີຮ້າຍ ຫຼື ເພື່ອເຮັດການອັດສະຈັນຕ່າງໆ ແລະ ພຣະອົງບໍ່ໄດ້ມາເພື່ອເຜີຍແຜ່ຂ່າວປະເສີດແຫ່ງການກັບໃຈ ຫຼື ເພື່ອມອບຄວາມລອດພົ້ນໃຫ້ກັບມະນຸດ. ນັ້ນກໍຍ້ອນວ່າ ພຣະເຢຊູໄດ້ສຳເລັດພາລະກິດນີ້ແລ້ວ ແລະ ພຣະເຈົ້າຈະບໍ່ກະທຳຊໍ້າພາລະກິດແບບດຽວກັນ. ໃນປັດຈຸບັນ ພຣະເຈົ້າລົງມາເພື່ອນຳຈຸດຈົບມາສູ່ຍຸກແຫ່ງພຣະຄຸນ ແລະ ຍົກເລີກການປະຕິບັດທຸກຢ່າງຂອງຍຸກແຫ່ງພຣະຄຸນ. ພຣະເຈົ້າທີ່ແທ້ຈິງໄດ້ລົງມາເພື່ອສະແດງວ່າພຣະອົງເປັນພຣະເຈົ້າທີ່ແທ້ຈິງໂດຍສະເພາະ. ເມື່ອພຣະເຢຊູມາ, ພຣະອົງກ່າວພຣະທຳພຽງເລັກນ້ອຍ; ສິ່ງທີ່ສຳຄັນກໍຄືພຣະອົງສະແດງການອັດສະຈັນ, ເຮັດໝາຍສຳຄັນ ແລະ ສິ່ງມະຫັດສະຈັນຕ່າງໆ ແລະ ຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ຫຼື ບໍ່ດັ່ງນັ້ນ ພຣະອົງກໍຈະກ່າວຄຳທຳນາຍເພື່ອຊັກຈູງຜູ້ຄົນ ແລະ ເພື່ອເຮັດໃຫ້ພວກເຂົາເຫັນວ່າ ພຣະອົງເປັນພຣະເຈົ້າທີ່ແທ້ຈິງ ແລະ ພຣະອົງເປັນພຣະເຈົ້າທີ່ບໍ່ມີອະຄະຕິ. ໃນທີ່ສຸດແລ້ວ, ພຣະອົງສຳເລັດພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນ. ພຣະເຈົ້າແຫ່ງຍຸກປັດຈຸບັນບໍ່ສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນໃດໆ ຫຼື ພຣະອົງບໍ່ຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ. ເມື່ອພຣະເຢຊູມາ, ພາລະກິດທີ່ພຣະອົງປະຕິບັດແມ່ນພຽງສະແດງເຖິງສ່ວນໜຶ່ງຂອງພຣະເຈົ້າ ແຕ່ປັດຈຸບັນນີ້ ພຣະເຈົ້າແມ່ນມາເພື່ອປະຕິບັດຂັ້ນຕອນຂອງພາລະກິດທີ່ກຳນົດໄວ້ທັງໝົດ ຍ້ອນພຣະເຈົ້າບໍ່ເຮັດຊໍ້າພາລະກິດແບບດຽວກັນ; ພຣະອົງເປັນພຣະເຈົ້າທີ່ໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າ ແລະ ດ້ວຍເຫດນີ້ທຸກສິ່ງທີ່ເຈົ້າເຫັນໃນປັດຈຸບັນແມ່ນພຣະທຳ ແລະ ພາລະກິດຂອງພຣະເຈົ້າທີ່ແທ້ຈິງ.

ພຣະເຈົ້າທີ່ບັງເກີດເປັນມະນຸດໃນຍຸກສຸດທ້າຍແມ່ນມາເພື່ອກ່າວພຣະທຳຂອງພຣະອົງໂດຍສະເພາະ, ເພື່ອອະທິບາຍທຸກສິ່ງທີ່ຈຳເປັນຕໍ່ຊີວິດຂອງມະນຸດ, ເພື່ອຊີ້ໃຫ້ເຫັນສິ່ງທີ່ມະນຸດສົມຄວນເຂົ້າຫາ, ເພື່ອສະແດງການກະທຳຂອງພຣະເຈົ້າໃຫ້ມະນຸດເຫັນ ແລະ ເພື່ອສະແດງສະຕິປັນຍາ, ລິດອຳນາດອັນໄພສານ ແລະ ຄວາມມະຫັດສະຈັນຂອງພຣະເຈົ້າໃຫ້ກັບມະນຸດ. ໂດຍຜ່ານຫຼາກຫຼາຍວິທີທີ່ພຣະເຈົ້າກ່າວ, ມະນຸດຈະໄດ້ເຫັນຄວາມລໍ້າເລີດຂອງພຣະເຈົ້າ, ຄວາມຍິ່ງໃຫຍ່ຂອງພຣະເຈົ້າ ແລະ ນອກເໜືອໄປກວ່ານັ້ນມະນຸດຈະໄດ້ເຫັນຄວາມຖ່ອມຕົວ ແລະ ຄວາມລີ້ລັບຂອງພຣະເຈົ້າ. ມະນຸດເຫັນວ່າພຣະເຈົ້າສູງສົ່ງ, ແຕ່ພຣະອົງຖ່ອມຕົວ ແລະ ຄວາມລີ້ລັບ ແລະ ສາມາດກາຍເປັນຜູ້ຕໍ່າຕ້ອຍທີ່ສຸດໄດ້. ພຣະທຳບາງຂໍ້ຂອງພຣະອົງແມ່ນກ່າວອອກມາຈາກມຸມມອງຂອງພຣະວິນຍານ

ໂດຍກົງ, ບາງຂໍ້ແມ່ນກ່າວອອກມາຈາກມຸມມອງຂອງມະນຸດໂດຍກົງ ແລະ ບາງຂໍ້ແມ່ນກ່າວອອກມາຈາກມຸມມອງຂອງບຸກຄົນທີສາມ. ດ້ວຍສິ່ງນີ້, ສາມາດເຫັນໄດ້ວ່າ ວິທີການຂອງພາລະກິດຂອງພຣະເຈົ້າແຕກຕ່າງກັນຢ່າງໃຫຍ່ຫຼວງ ແລະ ພຣະອົງເຮັດໃຫ້ມະນຸດເຫັນຄວາມແຕກຕ່າງນັ້ນໂດຍຜ່ານພຣະທຳ. ພາລະກິດຂອງພຣະເຈົ້າໃນຊ່ວງຍຸກສຸດທ້າຍແມ່ນທັງທຳມະດາ ແລະ ເປັນຄວາມຈິງ ແລະ ດ້ວຍເຫດນັ້ນ ກຸ່ມຄົນໃນຍຸກສຸດທ້າຍຈະໄດ້ຜະເຊີນກັບການທົດລອງທີ່ຍິ່ງໃຫຍ່ທີ່ສຸດ. ຍ້ອນຄວາມທຳມະດາ ແລະ ຄວາມເປັນຈິງຂອງພຣະເຈົ້າ, ທຸກຄົນຈຶ່ງໄດ້ເຂົ້າຢູ່ໃນຊ່ວງການທົດລອງດັ່ງກ່າວ; ມະນຸດດັ່ງກ່າວນັ້ນທີ່ຕົກຢູ່ໃນການທົດລອງຂອງພຣະເຈົ້າ ແມ່ນຍ້ອນຄວາມທຳມະດາ ແລະ ຄວາມເປັນຈິງຂອງພຣະເຈົ້າ. ໃນຊ່ວງຍຸກຂອງພຣະເຢຊູແມ່ນບໍ່ມີແນວຄວາມຄິດ ຫຼື ການທົດລອງ. ຍ້ອນວ່າພາລະກິດສ່ວນໃຫຍ່ທີ່ພຣະເຢຊູປະຕິບັດແມ່ນສອດຄ່ອງກັບແນວຄວາມຄິດຂອງມະນຸດ, ຜູ້ຄົນຕິດຕາມພຣະອົງ ແລະ ພວກເຂົາບໍ່ມີແນວຄວາມຄິດຕ່າງໆນາໆກ່ຽວກັບພຣະອົງ. ການທົດລອງໃນປັດຈຸບັນເປັນການທົດລອງທີ່ຍິ່ງໃຫຍ່ທີ່ສຸດທີ່ມະນຸດເຄີຍໄດ້ຜະເຊີນ ແລະ ເມື່ອເວລາເວົ້າເຖິງຜູ້ຄົນທີ່ອອກມາຈາກຄວາມລຳບາກຍາກແຄ້ນທີ່ສຸດ, ນີ້ຄືຄວາມລຳບາກຍາກແຄ້ນທີ່ຖືກເວົ້າເຖິງ. ໃນປັດຈຸບັນພຣະເຈົ້າກ່າວເພື່ອເຮັດໃຫ້ເກີດຄວາມເຊື່ອ, ຄວາມຮັກ, ການຍອມຮັບຄວາມທົນທຸກ ແລະ ຄວາມເຊື່ອຟັງໃນຜູ້ຄົນເຫຼົ່ານີ້. ພຣະທຳທີ່ກ່າວໂດຍພຣະເຈົ້າຜູ້ບັງເກີດເປັນມະນຸດໃນຍຸກສຸດທ້າຍ ແມ່ນຖືກກ່າວໂດຍອີງຕາມທາດແທ້ ແລະ ທຳມະຊາດຂອງມະນຸດ, ອີງຕາມການປະພຶດຂອງມະນຸດ ແລະ ອີງຕາມສິ່ງທີ່ມະນຸດຄວນເຂົ້າສູ່ໃນປັດຈຸບັນ. ພຣະທຳຂອງພຣະອົງທັງເປັນຈິງ ແລະ ທຳມະດາ: ພຣະອົງບໍ່ໄດ້ກ່າວເຖິງອະນາຄົດ ຫຼື ພຣະອົງບໍ່ໄດ້ຫັນເບິ່ງໃນອະດີດ; ພຣະອົງພຽງແຕ່ກ່າວເຖິງສິ່ງທີ່ຄວນເຂົ້າເຖິງ, ການນຳໄປປະຕິບັດ ແລະ ການເຂົ້າໃຈໃນປັດຈຸບັນເທົ່ານັ້ນ. ຖ້າໃນຊ່ວງຍຸກປັດຈຸບັນ ມີບຸກຄົນໃດໜຶ່ງປາກົດຂຶ້ນ ເຊິ່ງເປັນຄົນທີ່ສາມາດສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນຕ່າງໆ, ຂັບໄລ່ຜີຮ້າຍ, ຮັກສາຄົນປ່ວຍ ແລະ ເຮັດການອັດສະຈັນຫຼາຍຢ່າງ, ຖ້າບຸກຄົນນີ້ອ້າງວ່າ ພວກເຂົາແມ່ນພຣະເຢຊູທີ່ລົງມາ, ນີ້ແມ່ນເປັນພຽງສິ່ງປອມທີ່ຖືກສ້າງຂຶ້ນໂດຍວິນຍານຊົ່ວຮ້າຍເທົ່ານັ້ນ ເຊິ່ງເປັນການຮຽນແບບພຣະເຢຊູ. ຈົ່ງຈື່ສິ່ງນີ້ໄວ້! ພຣະເຈົ້າບໍ່ເຮັດຊໍ້າພາລະກິດແບບດຽວກັນ. ບາດກ້າວໃນພາລະກິດຂອງພຣະເຢຊູແມ່ນໄດ້ຖືກເຮັດໃຫ້ສົມບູນແລ້ວ ແລະ ພຣະເຈົ້າຈະບໍ່ປະຕິບັດບາດກ້າວໃນພາລະກິດນັ້ນອີກຈັກເທື່ອ. ພາລະກິດຂອງພຣະເຈົ້າແມ່ນບໍ່ສາມາດເຂົ້າກັນໄດ້ກັບແນວຄວາມຄິດຂອງມະນຸດ; ຕົວຢ່າງເຊັ່ນ: ພັນທະສັນຍາເດີມໄດ້ທຳນາຍການມາຂອງພຣະເມຊີອາ, ແຕ່ຜົນຮັບຂອງຄຳທຳນາຍນີ້ແມ່ນການມາຂອງພຣະເຢຊູ. ສິ່ງນີ້ໄດ້ເກີດຂຶ້ນແລ້ວ, ສະນັ້ນ ມັນກໍຈະຜິດທີ່ຈະໃຫ້ພຣະເມຊີອາອີກອົງໜຶ່ງລົງມາ. ພຣະເຢຊູໄດ້ລົງມາແລ້ວຄັ້ງໜຶ່ງ ແລະ ມັນກໍຈະຜິດຖ້າຕ້ອງໃຫ້ພຣະເຢຊູກັບມາອີກໃນຄັ້ງນີ້. ມີຊື່ດຽວສຳລັບແຕ່ລະຍຸກ ແລະ ແຕ່ລະຊື່ກໍອະທິບາຍລັກສະນະຂອງຍຸກນັ້ນໆ. ໃນແນວຄວາມຄິດຂອງມະນຸດ, ພຣະເຈົ້າຕ້ອງສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນສະເໝີ, ຕ້ອງຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍສະເໝີ ແລະ ຕ້ອງເປັນຄືກັບພຣະເຢຊູ. ແຕ່ເວລານີ້ພຣະເຈົ້າບໍ່ໄດ້ເປັນແບບນັ້ນເລີຍ. ໃນຊ່ວງຍຸກສຸດທ້າຍ, ຖ້າພຣະເຈົ້າຍັງສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນ

ແລະ ຍັງຂັບໄລ່ຜີຮ້າຍ ແລະ ຮັກສາຄົນປ່ວຍ, ຖ້າພຣະອົງເຮັດສິ່ງດຽວກັນກັບທີ່ພຣະເຢຊູໄດ້ເຮັດ ແລ້ວພຣະເຈົ້າກໍເຮັດຊໍ້າພາລະກິດແບບດຽວກັນ ແລະ ພາລະກິດຂອງພຣະເຢຊູກໍຈະບໍ່ມີຄວາມໝາຍ ຫຼື ຄຸນຄ່າເລີຍ. ດ້ວຍເຫດນັ້ນ, ພຣະເຈົ້າຈຶ່ງປະຕິບັດໜຶ່ງບາດກ້າວຂອງພາລະກິດໃນແຕ່ລະຍຸກ. ເມື່ອແຕ່ລະບາດກ້າວຂອງພາລະກິດຂອງພຣະອົງຖືກເຮັດໃຫ້ສົມບູນແລ້ວ, ວິນຍານຊົ່ວຮ້າຍກໍຈະຮຽນແບບຢ່າງໄວ ແລະ ຫຼັງຈາກທີ່ຊາຕານເລີ່ມເຮັດຕາມພາລະກິດຂອງພຣະເຈົ້າທັນທີທັນໃດ, ພຣະເຈົ້າກໍຈະປ່ຽນເປັນວິທີການທີ່ແຕກຕ່າງ. ເມື່ອພຣະເຈົ້າໄດ້ເຮັດໃຫ້ບາດກ້າວຂອງພາລະກິດຂອງພຣະອົງສໍາເລັດແລ້ວ, ວິນຍານຊົ່ວຮ້າຍກໍຈະຮຽນແບບ. ພວກເຈົ້າຕ້ອງຊັດເຈນກ່ຽວກັບເລື່ອງນີ້. ເປັນຫຍັງພາລະກິດຂອງພຣະເຈົ້າໃນປັດຈຸບັນຈຶ່ງແຕກຕ່າງຈາກພາລະກິດຂອງພຣະເຢຊູ? ເປັນຫຍັງພຣະເຈົ້າໃນປັດຈຸບັນຈຶ່ງບໍ່ສະແດງໝາຍສໍາຄັນ ແລະ ສິ່ງມະຫັດສະຈັນ, ບໍ່ຂັບໄລ່ຜີຮ້າຍ ແລະ ບໍ່ຮັກສາຄົນປ່ວຍ? ຖ້າພາລະກິດຂອງພຣະເຈົ້າເປັນແບບດຽວກັນກັບພາລະກິດທີ່ປະຕິບັດໃນຍຸກແຫ່ງພຣະບັນຍັດ, ພຣະອົງຈະສາມາດຕາງໜ້າໃຫ້ກັບພຣະເຈົ້າຂອງຍຸກແຫ່ງພຣະບັນຍັດໄດ້ບໍ? ພຣະອົງຈະສາມາດຕາງໜ້າໃຫ້ກັບພຣະເຈົ້າຂອງຍຸກແຫ່ງພຣະຄຸນໄດ້ບໍ? ພຣະອົງຈະສາມາດເຮັດໃຫ້ພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນສໍາເລັດໄດ້ບໍ? ໃນຍຸກແຫ່ງພຣະບັນຍັດ, ຖ້າພຣະເຢຊູເຂົ້າໄປໃນວິຫານ ແລະ ຮັກສາວັນສະບາໂຕ, ກໍຈະບໍ່ມີໃຜຂົ່ມເຫັງພຣະອົງ ແລະ ໝົດທຸກຄົນກໍຈະຮັບເອົາພຣະອົງ. ຖ້າເປັນດັ່ງນັ້ນ, ພຣະອົງຈະສາມາດຖືກຄຶງໄວ້ທີ່ໄມ້ກາງແຂນໄດ້ບໍ? ພຣະອົງຈະສາມາດເຮັດໃຫ້ພາລະກິດແຫ່ງການໄຖ່ບາບສໍາເລັດໄດ້ບໍ? ແມ່ນຫຍັງຄືຈຸດສໍາຄັນ ຖ້າພຣະເຈົ້າຜູ້ບັງເກີດເປັນມະນຸດໃນຍຸກສຸດທ້າຍສະແດງໝາຍສໍາຄັນ ແລະ ສິ່ງມະຫັດສະຈັນຄືກັບພຣະເຢຊູ? ມີພຽງການປະຕິບັດອີກສ່ວນໜຶ່ງຂອງພາລະກິດຂອງພຣະເຈົ້າໃນຊ່ວງຍຸກສຸດທ້າຍເທົ່ານັ້ນ ເຊິ່ງເປັນສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງພຣະອົງ, ມະນຸດຈຶ່ງຈະສາມາດຮັບຄວາມຮູ້ຢ່າງເລິກເຊິ່ງຍິ່ງຂຶ້ນກ່ຽວກັບພຣະເຈົ້າ ແລະ ມີພຽງວິທີນີ້ເທົ່ານັ້ນແຜນການຄຸ້ມຄອງຂອງພຣະເຈົ້າຈຶ່ງຈະຖືກເຮັດໃຫ້ສໍາເລັດ.

ໃນລະຫວ່າງຍຸກສຸດທ້າຍ ພຣະເຈົ້າໄດ້ລົງມາເພື່ອກ່າວພຣະທໍາຂອງພຣະອົງໂດຍສະເພາະ. ພຣະອົງກ່າວພຣະທໍາຈາກມຸມມອງຂອງພຣະວິນຍານ, ຈາກມຸມມອງຂອງມະນຸດ ແລະ ຈາກມຸມມອງຂອງບຸກຄົນທີສາມ; ພຣະອົງກ່າວໂດຍໃຊ້ຫຼາຍວິທີ, ນໍາໃຊ້ໜຶ່ງວິທີສໍາລັບຊ່ວງໄລຍະເວລາໜຶ່ງ ແລະ ພຣະອົງນໍາໃຊ້ວິທີຂອງການກ່າວເພື່ອປ່ຽນແປງແນວຄວາມຄິດຂອງມະນຸດ ແລະ ກໍາຈັດພາບລັກຂອງພຣະເຈົ້າທີ່ເລື່ອນລອຍໃຫ້ອອກຈາກຫົວໃຈຂອງມະນຸດ. ນີ້ຄືພາລະກິດຫຼັກທີ່ພຣະເຈົ້າໄດ້ປະຕິບັດ. ຍ້ອນມະນຸດເຊື່ອວ່າ ພຣະເຈົ້າໄດ້ລົງມາເພື່ອຮັກສາຄົນປ່ວຍ, ເພື່ອຂັບໄລ່ຜີຮ້າຍ, ເພື່ອເຮັດການອັດສະຈັນ ແລະ ເພື່ອໃຫ້ພອນທາງວັດຖຸແກ່ມະນຸດ. ພຣະເຈົ້າປະຕິບັດຂັ້ນຕອນນີ້ຂອງພາລະກິດ, ນັ້ນກໍຄື ພາລະກິດແຫ່ງການລົງໂທດ ແລະ ການພິພາກສາ ເພື່ອກໍາຈັດສິ່ງເຫຼົ່ານັ້ນອອກຈາກແນວຄວາມຄິດຂອງມະນຸດ ເພື່ອມະນຸດຈະຮູ້ຄວາມເປັນຈິງ ແລະ ຄວາມທໍາມະດາຂອງພຣະເຈົ້າ ແລະ ເພື່ອວ່າພາບລັກຂອງພຣະເຢຊູຈະຖືກລົບອອກຈາກຫົວໃຈຂອງເຂົາ ແລະ ຖືກແທນທີ່ໂດຍພາບລັກໃໝ່ຂອງພຣະເຈົ້າ. ທັນທີທີ່ພາບລັກຂອງພຣະເຈົ້າພາຍໃນໃຈມະນຸດເລີ່ມເກົ່າລົງ ມັນກໍຈະກາຍເປັນຮູບບູຊາ. ເມື່ອ

ພຣະເຢຊູມາ ແລະ ປະຕິບັດພາລະກິດຂັ້ນຕອນນັ້ນ ພຣະອົງບໍ່ໄດ້ເປັນຕົວແທນໃຫ້ກັບຄວາມບໍລິບູນຂອງພຣະເຈົ້າ. ພຣະອົງເຮັດໝາຍສຳຄັນ ແລະ ສິ່ງອັດສະຈັນບາງຢ່າງ, ກ່າວພຣະທຳບາງຂໍ້ ແລະໃນທີ່ສຸດກໍຖືກຄຶງໄວ້ທີ່ໄມ້ກາງແຂນ ແລະ ພຣະອົງກໍເປັນຕົວແທນສ່ວນໜຶ່ງຂອງພຣະເຈົ້າ. ພຣະອົງບໍ່ສາມາດເປັນຕົວແທນໃຫ້ກັບທຸກສິ່ງທີ່ເປັນພຣະເຈົ້າ ແຕ່ກົງກັນຂ້າມ ພຣະອົງເປັນຕົວແທນໃຫ້ກັບພຣະເຈົ້າໃນການປະຕິບັດພາລະກິດສ່ວນໜຶ່ງຂອງພຣະເຈົ້າ. ນັ້ນກໍຍ້ອນວ່າ ພຣະເຈົ້າຍິ່ງໃຫຍ່ຫຼາຍ ແລະ ອັດສະຈັນຫຼາຍ ແລະ ບໍ່ສາມາດຢັ່ງເຖິງໄດ້ ແລະ ຍ້ອນພຣະເຈົ້າພຽງແຕ່ປະຕິບັດພາລະກິດຂອງພຣະອົງພຽງໜຶ່ງສ່ວນໃນແຕ່ລະຍຸກ. ພາລະກິດທີ່ພຣະເຈົ້າໄດ້ປະຕິບັດໃນລະຫວ່າງຍຸກນີ້ ໂດຍສະເພາະຢ່າງຍິ່ງກໍແມ່ນການສະໜອງພຣະທຳສຳລັບຊີວິດຂອງມະນຸດ, ການເປີດໂປງທຳມະຊາດ, ແກ່ນແທ້ຂອງມະນຸດ ແລະ ອຸປະນິໄສທີ່ເສື່ອມຊາມຂອງເຂົາ ແລະ ການທຳລາຍແນວຄວາມຄິດທາງສາສະໜາ, ຄວາມຄິດກ່ຽວກັບສັກດີນາ ແລະ ຄວາມຄິດທີ່ຫຼ້າສະໄໝ; ຄວາມຮູ້ ແລະ ວັດທະນະທຳຂອງມະນຸດຕ້ອງຖືກຊຳລະລ້າງຜ່ານການຖືກເປີດໂປງໂດຍພຣະທຳຂອງພຣະເຈົ້າ. ໃນຍຸກສຸດທ້າຍ ພຣະເຈົ້ານຳໃຊ້ພຣະທຳ, ບໍ່ແມ່ນໝາຍສຳຄັນ ແລະ ສິ່ງອັດສະຈັນ ເພື່ອເຮັດໃຫ້ມະນຸດສົມບູນ. ພຣະອົງນຳໃຊ້ພຣະທຳຂອງພຣະອົງເພື່ອເປີດເຜີຍມະນຸດ, ເພື່ອພິພາກສາມະນຸດ, ເພື່ອລົງໂທດມະນຸດ ແລະ ເພື່ອເຮັດໃຫ້ມະນຸດສົມບູນ, ເພື່ອວ່າໃນພຣະທຳຂອງພຣະເຈົ້າ ມະນຸດຈະໄດ້ເຫັນສະຕິປັນຍາ ແລະ ຄວາມງົດງາມຂອງພຣະເຈົ້າ ແລະ ເຂົ້າໃຈອຸປະນິໄສຂອງພຣະເຈົ້າ, ເພື່ອວ່າ ດ້ວຍພຣະທຳຂອງພຣະເຈົ້າ ມະນຸດຈະເຫັນການກະທຳຂອງພຣະເຈົ້າ. ໃນລະຫວ່າງຍຸກແຫ່ງພຣະບັນຍັດ ພຣະເຢໂຮວາໄດ້ນຳໂມເຊອອກຈາກປະເທດອີຢິບດ້ວຍພຣະທຳຂອງພຣະອົງ ແລະ ກ່າວພຣະທຳບາງຂໍ້ກັບຊາວອິດສະຣາເອນ; ໃນເວລານັ້ນການກະທຳບາງສ່ວນຂອງພຣະເຈົ້າຖືກເຮັດໃຫ້ເຂົ້າໃຈໄດ້ງ່າຍ ແຕ່ຍ້ອນຄວາມສາມາດຂອງມະນຸດມີຂີດຈຳກັດ ແລະ ບໍ່ມີສິ່ງໃດທີ່ສາມາດເຮັດໃຫ້ຄວາມຮູ້ຂອງເຂົາສົມບູນໄດ້ ພຣະເຈົ້າຈຶ່ງສືບຕໍ່ກ່າວ ແລະປະຕິບັດພາລະກິດຂອງພຣະອົງ. ໃນຍຸກແຫ່ງພຣະຄຸນ ມະນຸດເຫັນການກະທຳບາງສ່ວນຂອງພຣະເຈົ້າອີກຄັ້ງ. ພຣະເຢຊູສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ, ຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ແລະ ຖືກຄຶງໄວ້ທີ່ໄມ້ກາງແຂນ, ສາມມື້ຫຼັງຈາກນັ້ນ ພຣະອົງຟື້ນຄືນມາ ແລະ ປາກົດຕົວຜ່ານເນື້ອໜັງຕໍ່ໜ້າມະນຸດ. ມະນຸດບໍ່ຮູ້ຫຍັງຫຼາຍໄປກວ່ານີ້ກ່ຽວກັບພຣະເຈົ້າ. ມະນຸດຮູ້ຫຼາຍເທົ່າທີ່ພຣະເຈົ້າສະແດງໃຫ້ເຂົາເຫັນ ແລະ ຖ້າພຣະເຈົ້າບໍ່ສະແດງໃຫ້ມະນຸດເຫັນຫຼາຍກວ່ານີ້ ແລ້ວສິ່ງດັ່ງກ່າວກໍເປັນຂອບເຂດທີ່ມະນຸດກຳນົດໄວ້ກ່ຽວກັບພຣະເຈົ້າ. ດ້ວຍເຫດນັ້ນ ພຣະເຈົ້າຈຶ່ງສືບຕໍ່ປະຕິບັດພາລະກິດຂອງພຣະອົງ ເພື່ອຄວາມຮູ້ຂອງມະນຸດກ່ຽວກັບພຣະອົງຈະເລິກເຊິ່ງຂຶ້ນ ແລະ ເພື່ອມະນຸດຈະຄ່ອຍໆຮູ້ຈັກທາດແທ້ຂອງພຣະເຈົ້າຫຼາຍຂຶ້ນ. ໃນຍຸກສຸດທ້າຍ ພຣະເຈົ້ານຳໃຊ້ພຣະທຳຂອງພຣະອົງເພື່ອເຮັດໃຫ້ມະນຸດສົມບູນ. ຈິດໃຈທີ່ເສື່ອມໂຊມຂອງເຈົ້າຖືກເປີດເຜີຍໂດຍພຣະທຳຂອງພຣະເຈົ້າ ແລະແນວຄວາມຄິດທາງສາສະໜາຂອງເຈົ້າຖືກແທນທີ່ໂດຍຄວາມເປັນຈິງຂອງພຣະເຈົ້າ. ພຣະເຈົ້າຜູ້ບັງເກີດເປັນມະນຸດໃນຍຸກສຸດທ້າຍໄດ້ລົງມາ ໂດຍສະເພາະຢ່າງຍິ່ງແມ່ນເພື່ອປະຕິບັດຕາມພຣະທຳທີ່ກ່າວວ່າ "ພຣະທຳກາຍມາເປັນມະນຸດ, ພຣະທຳເກີດມາເປັນມະນຸດ ແລະ ພຣະທຳປາກົດໃນຮ່າງກາຍ" ແລະ

ຖ້າເຈົ້າບໍ່ມີຄວາມຮູ້ຢ່າງແທ້ຈິງກ່ຽວກັບສິ່ງນີ້ ແລ້ວເຈົ້າຈະບໍ່ສາມາດຕັ້ງໝັ້ນໃນຕົວເອງໄດ້. ໃນລະຫວ່າງຍຸກສຸດທ້າຍ ສ່ວນຫຼາຍ ພຣະເຈົ້າປະສົງທີ່ຈະເຮັດສຳເລັດຂັ້ນຕອນພາລະກິດຂອງພຣະທຳທີ່ປາກົດໃນເນື້ອໜັງມະນຸດ ແລະ ນີ້ຄືສ່ວນໜຶ່ງຂອງແຜນການຄຸ້ມຄອງຂອງພຣະເຈົ້າ. ດ້ວຍເຫດນັ້ນ ຄວາມຮູ້ຂອງພວກເຈົ້າຕ້ອງຊັດເຈນ; ບໍ່ວ່າວິທີການປະຕິບັດພາລະກິດຂອງພຣະອົງຈະເປັນຢ່າງໃດກໍຕາມ, ພຣະເຈົ້າຈະບໍ່ອະນຸຍາດໃຫ້ມະນຸດກຳນົດຂອບເຂດພຣະອົງ. ຖ້າພຣະເຈົ້າບໍ່ປະຕິບັດພາລະກິດນີ້ໃນລະຫວ່າງຍຸກສຸດທ້າຍ ແລ້ວຄວາມຮູ້ຂອງມະນຸດກ່ຽວກັບພຣະອົງກໍຈະບໍ່ສາມາດສືບຕໍ່ໄດ້. ເຈົ້າຈະຮູ້ຈັກພຽງແຕ່ວ່າ ພຣະເຈົ້າຖືກຄຶງໄວ້ທີ່ໄມ້ກາງແຂນ ແລະ ສາມາດທຳລາຍເມືອງໂຊໂດມ ແລະ ພຣະເຢຊູສາມາດຟື້ນຄືນຊີບໄດ້ ແລະ ປາກົດໃຫ້ເປໂຕເຫັນ... ແຕ່ເຈົ້າຈະບໍ່ມີທາງເວົ້າໄດ້ວ່າ ພຣະທຳຂອງພຣະເຈົ້າສາມາດເຮັດໃຫ້ທຸກຢ່າງສຳເລັດໄດ້ ແລະ ສາມາດເອົາຊະນະມະນຸດໄດ້. ມີພຽງແຕ່ການຜະເຊີນກັບພຣະທຳຂອງພຣະເຈົ້າເທົ່ານັ້ນ ເຈົ້າຈຶ່ງສາມາດກ່າວໄດ້ວ່າມີຄວາມຮູ້ກ່າວກັບພຣະເຈົ້າ ແລະ ເມື່ອເຈົ້າຜະເຊີນກັບພາລະກິດຂອງພຣະເຈົ້າຫຼາຍພຽງໃດ ຄວາມຮູ້ຂອງເຈົ້າກ່ຽວກັບພຣະອົງກໍຈະຮອບຄອບຫຼາຍພຽງນັ້ນ. ມີພຽງແຕ່ເມື່ອນັ້ນ ເຈົ້າຈຶ່ງຈະຢຸດກຳນົດຂອບເຂດພຣະເຈົ້າໂດຍໃຊ້ແນວຄວາມຄິດຂອງເຈົ້າເອງ. ມະນຸດມາຮູ້ຈັກພຣະເຈົ້າໂດຍການຜະເຊີນກັບພາລະກິດຂອງພຣະອົງ ແລະ ບໍ່ມີວິທີທີ່ຖືກຕ້ອງອື່ນໃດອີກໃນການຮູ້ຈັກພຣະເຈົ້າ. ໃນປັດຈຸບັນ ມີຫຼາຍຄົນທີ່ບໍ່ເຮັດຫຍັງ ແຕ່ລໍຖ້າເພື່ອເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ເວລາແຫ່ງໄພພິບັດອັນຍິ່ງໃຫຍ່. ເຈົ້າເຊື່ອໃນພຣະເຈົ້າບໍ ຫຼື ເຈົ້າເຊື່ອໃນໄພພິບັດອັນຍິ່ງໃຫຍ່? ເມື່ອໄພພິບັດອັນຍິ່ງໃຫຍ່ມາເຖິງ ມັນກໍຈະຊ້າເກີນໄປ ແລະ ຖ້າພຣະເຈົ້າບໍ່ສົ່ງໄພພິບັດອັນຍິ່ງໃຫຍ່ມາ ແລ້ວພຣະອົງບໍ່ແມ່ນພຣະເຈົ້າບໍ? ເຈົ້າເຊື່ອໃນໝາຍສຳຄັນ ແລະ ສິ່ງອັດສະຈັນບໍ ຫຼື ເຈົ້າເຊື່ອໃນພຣະເຈົ້າເອງ? ພຣະເຢຊູບໍ່ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນໃນເວລາຄົນຫົວເຍາະເຍີ້ຍພຣະອົງ; ແຕ່ພຣະອົງບໍ່ແມ່ນພຣະເຈົ້າບໍ? ເຈົ້າເຊື່ອໃນໝາຍສຳຄັນ ແລະ ສິ່ງອັດສະຈັນບໍ ຫຼື ເຈົ້າເຊື່ອໃນທາດແທ້ຂອງພຣະເຈົ້າ? ມຸມມອງຂອງມະນຸດກ່ຽວກັບຄວາມເຊື່ອໃນພຣະເຈົ້າແມ່ນຜິດ! ພຣະເຢໂຮວາກ່າວພຣະທຳຫຼາຍຂໍ້ໃນລະຫວ່າງຍຸກແຫ່ງພຣະບັນຍັດ ແຕ່ມາຮອດປັດຈຸບັນ ບາງສ່ວນກໍຍັງບໍ່ຖືກເຮັດໃຫ້ສຳເລັດເທື່ອ. ເຈົ້າສາມາດເວົ້າໄດ້ບໍວ່າ ພຣະເຢໂຮວາບໍ່ແມ່ນພຣະເຈົ້າ?

ໃນປັດຈຸບັນ ພວກເຈົ້າຄວນຮູ້ຊັດເຈນແລ້ວວ່າ ໃນຍຸກສຸດທ້າຍນີ້ ຄວາມຈິງແລ້ວພຣະເຈົ້າແມ່ນໄດ້ເຮັດສຳເລັດ "ພຣະທຳກາຍມາເປັນມະນຸດ" ແລ້ວ. ຜ່ານພາລະກິດທີ່ແທ້ຈິງຂອງພຣະອົງເທິງແຜ່ນດິນໂລກ ພຣະອົງຈຶ່ງເຮັດໃຫ້ມະນຸດຮູ້ຈັກພຣະອົງ, ມີສ່ວນຮ່ວມປະຕິບັດກັບພຣະອົງ ແລະ ເຮັດໃຫ້ພວກເຂົາໄດ້ເຫັນເຖິງການກະທຳທີ່ແທ້ຈິງຂອງພຣະອົງ. ພຣະອົງເຮັດໃຫ້ມະນຸດເຫັນໄດ້ຢ່າງຊັດເຈນວ່າ ພຣະອົງສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ມີບາງເວລາທີ່ພຣະອົງກໍບໍ່ສາມາດເຮັດແບບນັ້ນໄດ້, ນີ້ກໍຍ້ອນວ່າການປະຕິບັດພາລະກິດຂອງພຣະອົງໃນແຕ່ລະຍຸກແມ່ນແຕກຕ່າງກັນ. ຈາກສິ່ງນີ້ ເຈົ້າສາມາດເຫັນວ່າ ພຣະເຈົ້າບໍ່ແມ່ນບໍ່ສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ ແຕ່ກົງກັນຂ້າມ ພຣະອົງປ່ຽນແປງການປະຕິບັດຂອງພຣະອົງໃຫ້ສຳເລັດໂດຍອີງຕາມພາລະກິດ ແລະ

ອົງຕາມຍຸກ. ໃນຂັ້ນຕອນຂອງພາລະກິດໃນປັດຈຸບັນ ພຣະອົງບໍ່ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ; ເຫດຜົນທີ່ພຣະອົງສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນບາງຢ່າງໃນຍຸກຂອງພຣະເຢຊູກໍຍ້ອນວ່າ ພາລະກິດຂອງພຣະອົງໃນຍຸກນັ້ນແມ່ນແຕກຕ່າງກັນ. ພຣະເຈົ້າບໍ່ປະຕິບັດພາລະກິດດັ່ງກ່າວນັ້ນໃນຍຸກປັດຈຸບັນ ແລະ ບາງຄົນເຊື່ອວ່າ ພຣະອົງບໍ່ສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ ຫຼື ບໍ່ດັ່ງນັ້ນພວກເຂົາກໍຄິດວ່າ ຖ້າພຣະອົງບໍ່ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ ແລ້ວພຣະອົງກໍບໍ່ແມ່ນພຣະເຈົ້າ. ນີ້ບໍ່ແມ່ນຄວາມເຊື່ອທີ່ຜິດບໍ? ພຣະເຈົ້າສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ ແຕ່ພຣະອົງກຳລັງປະຕິບັດພາລະກິດໃນຍຸກທີ່ແຕກຕ່າງກັນ ແລະ ດ້ວຍເຫດນີ້ ພຣະອົງຈຶ່ງບໍ່ເຮັດໃນສິ່ງດັ່ງກ່າວ. ຍ້ອນວ່າ ນີ້ແມ່ນຍຸກທີ່ແຕກຕ່າງກັນ ແລະ ຍ້ອນວ່າ ນີ້ແມ່ນບາດກ້າວພາລະກິດທີ່ແຕກຕ່າງກັນ. ສິ່ງທີ່ພຣະເຈົ້າເຮັດເພື່ອໃຫ້ມະນຸດເຂົ້າໃຈໄດ້ງ່າຍນັ້ນກໍແຕກຕ່າງເຊັ່ນດຽວກັນ. ໃນລະຫວ່າງຍຸກໃໝ່ນີ້ ຄວາມເຊື່ອໃນພຣະເຈົ້າຂອງມະນຸດບໍ່ແມ່ນຄວາມເຊື່ອໃນໝາຍສຳຄັນ ແລະ ສິ່ງອັດສະຈັນ, ບໍ່ແມ່ນຄວາມເຊື່ອໃນສິ່ງອັດສະຈັນ, ແຕ່ເປັນຄວາມເຊື່ອໃນພາລະກິດທີ່ແທ້ຈິງຂອງພຣະອົງ. ມະນຸດມາຮູ້ຈັກພຣະເຈົ້າຜ່ານວິທີທີ່ພຣະເຈົ້າປະຕິບັດພາລະກິດ ແລະ ຄວາມຮູ້ນີ້ຂອງມະນຸດເຮັດໃຫ້ເກີດຄວາມເຊື່ອໃນພຣະເຈົ້າຢ່າງແທ້ຈິງ ເຊິ່ງເວົ້າໄດ້ວ່າ ນັ້ນຄືຄວາມເຊື່ອໃນພາລະກິດ ແລະ ການກະທຳຂອງພຣະເຈົ້າ. ໃນບາດກ້າວນີ້ຂອງພາລະກິດ ພຣະເຈົ້າຖືເອົາການກ່າວພຣະທຳເປັນຫຼັກ. ດັ່ງນັ້ນຢ່າລໍຖ້າເບິ່ງໝາຍສຳຄັນ ແລະ ສິ່ງອັດສະຈັນ; ເຈົ້າຈະບໍ່ເຫັນສິ່ງໃດເລີຍ! ນີ້ກໍ່ຍ້ອນວ່າເຈົ້າບໍ່ໄດ້ເກີດຢູ່ໃນຍຸກແຫ່ງພຣະຄຸນ. ຖ້າເຈົ້າໄດ້ເກີດຢູ່ໃນຍຸກນັ້ນ ເຈົ້າກໍຈະສາມາດເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ ແຕ່ເຈົ້າເກີດຢູ່ໃນຍຸກສຸດທ້າຍ ແລະ ເຈົ້າສາມາດເຫັນພຽງແຕ່ຄວາມເປັນຈິງ ແລະ ຄວາມທຳມະດາຂອງພຣະເຈົ້າ. ຢ່າຄາດຫວັງທີ່ຈະໄດ້ເຫັນພຣະເຢຊູໃນຮູບແບບເໜືອທຳມະຊາດໃນລະຫວ່າງຍຸກສຸດທ້າຍ. ເຈົ້າສາມາດພຽງແຕ່ເຫັນພຣະເຈົ້າທີ່ແທ້ຈິງຜູ້ບັງເກີດເປັນມະນຸດ ຜູ້ທີ່ບໍ່ແຕກຕ່າງຫຍັງຈາກມະນຸດທຳມະດາ. ໃນແຕ່ລະຍຸກ ພຣະເຈົ້າເຮັດໃນສິ່ງທີ່ແຕກຕ່າງໃຫ້ເຂົ້າໃຈໄດ້ງ່າຍ. ໃນແຕ່ລະຍຸກພຣະເຈົ້າເຮັດໃຫ້ການກະທຳຕ່າງໆຂອງພຣະເຈົ້າເຂົ້າໃຈໄດ້ງ່າຍ ແລະ ພາລະກິດຂອງແຕ່ລະຍຸກ ສ່ວນໜຶ່ງແມ່ນສະແດງເຖິງອຸປະນິໄສຂອງພຣະເຈົ້າ ແລະ ອີກສ່ວນໜຶ່ງສະແດງເຖິງການກະທຳຂອງພຣະເຈົ້າ. ການກະທຳທີ່ພຣະອົງໄດ້ເຮັດໃຫ້ເຂົ້າໃຈໄດ້ງ່າຍແຕກຕ່າງກັນໄປຕາມຍຸກທີ່ພຣະອົງປະຕິບັດພາລະກິດ ແຕ່ພວກມັນທັງໝົດເຮັດໃຫ້ມະນຸດມີຄວາມຮູ້ກ່ຽວກັບພຣະເຈົ້າຢ່າງເລິກເຊິ່ງຫຼາຍຂຶ້ນ, ມີຄວາມເຊື່ອໃນພຣະເຈົ້າທີ່ເປັນຈິງ ແລະ ທຳມະດາຫຼາຍຂຶ້ນ. ມະນຸດເຊື່ອໃນພຣະເຈົ້າ ຍ້ອນການກະທຳທັງໝົດຂອງພຣະເຈົ້າ ແລະ ຍ້ອນພຣະເຈົ້າອັດສະຈັນຫຼາຍ, ຍິ່ງໃຫຍ່ຫຼາຍ ຍ້ອນພຣະອົງມີລິດທານຸພາບສູງສຸດ ແລະ ບໍ່ສາມາດຢັ່ງເຖິງໄດ້. ຖ້າເຈົ້າເຊື່ອໃນພຣະເຈົ້າ ຍ້ອນພຣະອົງສາມາດເຮັດໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ສາມາດຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ແລ້ວມຸມມອງຂອງເຈົ້າກໍຜິດ ແລະ ບາງຄົນຈະເວົ້າກັບເຈົ້າວ່າ "ວິນຍານຊົ່ວຮ້າຍບໍ່ສາມາດເຮັດສິ່ງດັ່ງກ່າວນັ້ນໄດ້ຄືກັນບໍ?" ນີ້ບໍ່ແມ່ນເພື່ອສືບຕໍ່ເຮັດໃຫ້ພາບລັກຂອງພຣະເຈົ້າ ແລະ ພາບລັກຂອງຊາຕານສັບສົນກັນບໍ? ໃນປັດຈຸບັນ ຄວາມເຊື່ອໃນພຣະເຈົ້າຂອງມະນຸດເກີດຂຶ້ນກໍຍ້ອນວ່າການກະທຳຫຼາຍຢ່າງຂອງພຣະອົງ ແລະ ຍ້ອນພາລະກິດຈຳນວນຫຼວງຫຼາຍ

ທີ່ພຣະອົງປະຕິບັດ ແລະ ຫຼາຍວິທີການທີ່ພຣະອົງກ່າວ. ພຣະເຈົ້ານຳໃຊ້ຖ້ອຍຄຳຂອງພຣະອົງເພື່ອເອົາຊະນະມະນຸດ ແລະ ເຮັດໃຫ້ເຂົາສົມບູນ. ມະນຸດເຊື່ອໃນພຣະເຈົ້າ ຍ້ອນການກະທຳຫຼາຍຢ່າງຂອງພຣະອົງ ບໍ່ແມ່ນຍ້ອນພຣະອົງສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ. ຜູ້ຄົນໄດ້ຮູ້ຈັກພຣະເຈົ້າໂດຍການເປັນພະຍານເຖິງການກະທຳຂອງພຣະອົງ. ມີພຽງການຮູ້ຈັກການກະທຳທີ່ແທ້ຈິງຂອງພຣະເຈົ້າ, ຮູ້ຈັກວິທີທີ່ພຣະອົງປະຕິບັດພາລະກິດ, ວິທີການທີ່ເປັນເລີດທີ່ພຣະອົງນຳໃຊ້, ວິທີທີ່ພຣະອົງກ່າວ ແລະ ວິທີທີ່ພຣະອົງເຮັດໃຫ້ມະນຸດສົມບູນແບບ, ມີພຽງການຮູ້ຈັກໃນຮູບແບບລັກສະນະເຫຼົ່ານີ້ເທົ່ານັ້ນ ເຈົ້າຈຶ່ງສາມາດເຂົ້າໃຈຄວາມເປັນຈິງຂອງພຣະເຈົ້າໄດ້, ເຂົ້າໃຈອຸປະນິໄສຂອງພຣະອົງ, ຮູ້ຈັກສິ່ງທີ່ພຣະອົງມັກ, ສິ່ງທີ່ພຣະອົງກຽດຊັງ ແລະ ວິທີທີ່ພຣະອົງປະຕິບັດພາລະກິດກັບມະນຸດ. ດ້ວຍການຮູ້ຈັກຄວາມມັກ ແລະ ຄວາມບໍ່ມັກຂອງພຣະເຈົ້າ ເຈົ້າຈະສາມາດຈຳແນກຄວາມແຕກຕ່າງລະຫວ່າງສິ່ງທີ່ເປັນທາງບວກ ແລະ ສິ່ງທີ່ເປັນທາງລົບ ແລະ ຜ່ານຄວາມຮູ້ກ່ຽວກັບພຣະເຈົ້າຂອງເຈົ້າ, ເຈົ້າຈະມີຄວາມຄືບໜ້າໃນຊີວິດ. ສະຫຼຸບກໍຄື ເຈົ້າຕ້ອງຮັບເອົາຄວາມຮູ້ຂອງພາລະກິດຂອງພຣະເຈົ້າ ແລະ ເຈົ້າຕ້ອງເຮັດໃຫ້ມຸມມອງຂອງເຈົ້າຖືກຕ້ອງກ່ຽວກັບການເຊື່ອໃນພຣະເຈົ້າ.

# ພາລະກິດຂອງພຣະເຈົ້າງ່າຍດາຍສຳລັບທີ່ມະນຸດຈິນຕະນາການບໍ?

ໃນຖານະເປັນຄົນທີ່ເຊື່ອໃນພຣະເຈົ້າ, ເຈົ້າແຕ່ລະຄົນຄວນຊາບຊຶ້ງວ່າ ເຈົ້າໄດ້ຮັບການສັນລະເສີນ ແລະ ຄວາມລອດພົ້ນສູງສຸດຢ່າງແທ້ຈິງໂດຍການໄດ້ຮັບພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍ ແລະ ພາລະກິດແຫ່ງແຜນການຂອງພຣະອົງທີ່ພຣະອົງປະຕິບັດໃນຕົວເຈົ້າໃນມື້ນີ້. ພຣະເຈົ້າໄດ້ສ້າງຄົນກຸ່ມນີ້ໃຫ້ເປັນສູນກາງພາລະກິດຂອງພຣະອົງທົ່ວທັງຈັກກະວານ. ພຣະອົງໄດ້ເສຍສະຫຼະເລືອດຫົວໃຈທັງໝົດຂອງພຣະອົງສຳລັບພວກເຈົ້າ; ພຣະອົງໄດ້ຮຽກພາລະກິດທັງໝົດຂອງພຣະວິນຍານທົ່ວທັງຈັກກະວານກັບຄືນ ແລະ ມອບໃຫ້ກັບພວກເຈົ້າ. ນີ້ຄືເຫດຜົນທີ່ວ່າ ພວກເຈົ້າເປັນຄົນທີ່ໂຊກດີ. ນອກຈາກນັ້ນ, ພຣະອົງໄດ້ຍ້າຍລັດສະໝີຂອງພຣະອົງຈາກອິດສະຣາເອນ ເຊິ່ງເປັນຊົນຊາດທີ່ພຣະອົງໄດ້ຊົງເລືອກ ແລະ ມອບໃຫ້ກັບພວກເຈົ້າ ແລະ ພຣະອົງຈະເຮັດໃຫ້ຄວາມປະສົງຂອງແຜນງານຂອງພຣະອົງປາກົດອອກມາຢ່າງສົມບູນຜ່ານຄົນກຸ່ມນີ້. ດ້ວຍເຫດນັ້ນ, ພວກເຈົ້າເປັນຄົນທີ່ຈະຮັບມໍລະດົກຂອງພຣະເຈົ້າ ແລະ ຍິ່ງກວ່ານັ້ນແມ່ນ ພວກເຈົ້າເປັນຜູ້ສືບທອດລັດສະໝີຂອງພຣະເຈົ້າ. ບາງເທື່ອ ພວກເຈົ້າທຸກຄົນຈະຈົດຈຳພຣະທຳເຫຼົ່ານີ້: "ສຳລັບຄວາມຍາກລຳບາກອັນເລັກນ້ອຍຂອງພວກເຮົານັ້ນ ເປັນພຽງຊົ່ວຄາວທີ່ຫຼໍ່ຫຼອມໃຫ້ພວກເຮົາໄດ້ຮັບລັດສະໝີຢ່າງຫຼວງຫຼາຍເກີນຄຳບັນຍາຍ ແລະ ເປັນນິດນິລັນ". ພວກເຈົ້າທຸກຄົນໄດ້ຍິນພຣະທຳເຫຼົ່ານີ້ກ່ອນໜ້ານີ້ ແຕ່ບໍ່ມີໃຜໃນພວກເຈົ້າທີ່ເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພວກມັນ. ໃນມື້ນີ້ພວກເຈົ້າໄດ້ຮູ້ຢ່າງເລິກເຊິ່ງເຖິງຄວາມໝາຍທີ່ແທ້ຈິງຢູ່ໃນພຣະທຳ. ພຣະທຳເຫຼົ່ານີ້ຄວນຖືກປະຕິບັດໃຫ້ສຳເລັດໂດຍພຣະເຈົ້າໃນຍຸກສຸດທ້າຍ ແລະ ພວກມັນຈະຖືກເຮັດໃຫ້ສຳເລັດກັບຜູ້ຄົນທີ່ໄດ້ຖືກບຽດບຽນຂົ່ມເຫັງຢ່າງໂຫດຮ້າຍຈາກມັງກອນແດງທີ່ຍິ່ງໃຫຍ່ໃນດິນແດນທີ່ມັນນອນຂົດຢູ່. ມັງກອນແດງທີ່ຍິ່ງໃຫຍ່ຂົ່ມເຫັງພຣະເຈົ້າ ແລະ ເປັນສັດຕູຂອງພຣະເຈົ້າ, ເພາະສະນັ້ນ, ໃນດິນແດນແຫ່ງນີ້ ຄົນເຫຼົ່ານັ້ນທີ່ເຊື່ອໃນພຣະເຈົ້າກໍຈະຖືກເຍາະເຍີ້ຍ ແລະຖືກກົດຂີ່ ແລະ ຜົນທີ່ໄດ້ຄືພຣະທຳເຫຼົ່ານີ້ຈະຖືກຕື່ມເຕັມໃນຄົນກຸມນີ້ ນັ້ນກໍ່ຄືພວກເຈົ້າ. ຍ້ອນມັນໄດ້ລົງມືປະຕິບັດໃນດິນແດນທີ່ຕໍ່ຕ້ານພຣະເຈົ້າ, ພາລະກິດທັງໝົດຂອງພຣະເຈົ້າກໍຈະພົບກັບອຸປະສັກອັນໃຫຍ່ຫຼວງ ແລະ ການເຮັດສຳເລັດພຣະທຳຂອງພຣະອົງຫຼາຍຂໍ້ກໍຕ້ອງໃຊ້ເວລາ; ດ້ວຍເຫດນີ້, ຜູ້ຄົນຈຶ່ງຖືກເຮັດໃຫ້ບໍລິສຸດ ເຊິ່ງເປັນໝາກຜົນຈາກພຣະທຳຂອງພຣະເຈົ້າ ເຊິ່ງເປັນສ່ວນໜຶ່ງຂອງຄວາມທົນທຸກທໍລະມານ. ມັນລຳບາກຫຼາຍແທ້ໆສຳລັບພຣະເຈົ້າທີ່ຈະປະຕິບັດພາລະກິດຂອງພຣະອົງໃນດິນແດນຂອງມັງກອນແດງທີ່ຍິ່ງໃຫຍ່ ແຕ່ກໍຍ້ອນຄວາມລຳບາກນີ້ທີ່ພຣະເຈົ້າປະຕິບັດພາລະກິດຂອງພຣະອົງຂັ້ນຕອນໜຶ່ງ ເພື່ອເປີດເຜີຍໃຫ້ເຫັນເຖິງສະຕິປັນຍາ ແລະ ຄວາມອັດສະຈັນຂອງພຣະອົງແລະ ນຳໃຊ້ໂອກາດນີ້ເພື່ອເຮັດໃຫ້ກຸ່ມຄົນນີ້ສົມບູນແບບ. ແມ່ນຜ່ານການທົນທຸກທໍລະມານຂອງຜູ້ຄົນ, ຜ່ານຄວາມສາມາດຂອງພວກເຂົາ ແລະ ຜ່ານຈິດໃຈທັງໝົດທີ່ຄືກັບຊາຕານຂອງຜູ້ຄົນໃນດິນແດນແຫ່ງນີ້ທີ່ສົກກະປົກນີ້, ພຣະເຈົ້າຈຶ່ງໄດ້ປະຕິບັດພາລະກິດການຊຳລະໃຫ້ບໍລິສຸດ ແລະ ການປົກຄອງ ເພື່ອວ່າ ພຣະອົງຈະໄດ້ຮັບລັດສະໝີຈາກ

ສິ່ງນີ້ ແລະ ເພື່ອວ່າພຣະອົງອາດໄດ້ຮັບເອົາຄົນເຫຼົ່ານັ້ນທີ່ຢືນເປັນພະຍານແກ່ການກະທຳຂອງພຣະອົງ. ນີ້ແມ່ນຄວາມໝາຍທັງໝົດຂອງການເສຍສະຫຼະທັງໝົດທີ່ພຣະເຈົ້າໄດ້ກະທຳເພື່ອຄົນກຸ່ມນີ້. ສະຫຼຸບໄດ້ວ່າ ຜ່ານຄົນທີ່ເຫຼົ່ານັ້ນທີ່ຕໍ່ຕ້ານພຣະອົງ ພຣະເຈົ້າຈຶ່ງປະຕິບັດພາລະກິດແຫ່ງໄຊຊະນະ ແລະ ດ້ວຍເຫດນັ້ນ ອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າຈຶ່ງສາມາດເປີດເຜີຍອອກມາໃຫ້ເຫັນ. ສາມາດເວົ້າໄດ້ວ່າມີພຽງແຕ່ຄົນເຫຼົ່ານັ້ນໃນດິນແດນທີ່ບໍ່ບໍລິສຸດ ທີ່ເໝາະສົມແກ່ການສືບທອດລັດສະໝີຂອງພຣະເຈົ້າ ແລະ ມີພຽງສິ່ງນີ້ ທີ່ສາມາດໃຫ້ຈຸດເດັ່ນແກ່ອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າໄດ້. ນັ້ນຄືເຫດຜົນວ່າແມ່ນຈາກດິນແດນທີ່ບໍ່ບໍລິສຸດ ແລະ ຈາກບັນດາຄົນທີ່ດຳລົງຊີວິດໃນດິນແດນທີ່ສົກກະປົກນັ້ນທີ່ເຮັດໃຫ້ໄດ້ຮັບເອົາລັດສະໝີຂອງພຣະເຈົ້າໄດ້. ນີ້ຄືຄວາມປະສົງຂອງພຣະເຈົ້າ. ຂັ້ນຕອນຂອງພາລະກິດຂອງພຣະເຢຊູກໍ່ເປັນຄືກັນ; ພຣະອົງສາມາດຮັບລັດສະໝີຈາກໝູ່ພວກຟາຣີຊາຍທີ່ຂົ່ມເຫັງພຣະອົງເທົ່ານັ້ນ; ຖ້າບໍ່ແມ່ນຍ້ອນການຂົ່ມເຫັງຂອງພວກຟາຣີຊາຍ ແລະ ການທໍລະຍົດຂອງຢູດາ, ພຣະເຢຊູຈະບໍ່ຖືກເຍາະເຍີ້ຍ ຫຼື ຖືກກ່າວຮ້າຍ ແຮງໄກທີ່ຈະຖືກຄຶງໄວ້ທີ່ໄມ້ກາງແຂນເລີຍ ແລະ ດ້ວຍເຫດນັ້ນກໍຈະບໍ່ສາມາດໄດ້ຮັບລັດສະໝີ. ບ່ອນທີ່ພຣະເຈົ້າປະຕິບັດພາລະກິດໃນແຕ່ລະຍຸກ ແລະ ບ່ອນທີ່ພຣະອົງປະຕິບັດພາລະກິດໂດຍຜ່ານເນື້ອໜັງ ແມ່ນບ່ອນທີ່ພຣະອົງຈະຮັບລັດສະໝີ ແລະ ເປັນບ່ອນທີ່ພຣະອົງຈະຮັບຄົນເຫຼົ່ານັ້ນທີ່ພຣະອົງປະສົງທີ່ຈະຮັບເອົາ. ນີ້ເປັນແຜນງານຂອງພາລະກິດຂອງພຣະເຈົ້າ ແລະ ນີ້ເປັນການຄຸ້ມຄອງຂອງພຣະອົງ.

ໃນແຜນງານຂອງພຣະເຈົ້າໃນເວລາຫຼາຍພັນປີ, ພາລະກິດສອງພາກສ່ວນແມ່ນສຳເລັດໂດຍຜ່ານເນື້ອໜັງ: ສ່ວນທຳອິດແມ່ນພາລະກິດຂອງການຖືກຄຶງທີ່ໄມ້ກາງແຂນ ເຊິ່ງພຣະອົງໄດ້ຮັບລັດສະໝີ; ອີກສ່ວນຄືພາລະກິດແຫ່ງໄຊຊະນະ ແລະ ຄວາມສົມບູນໃນຍຸກສຸດທ້າຍ ເຊິ່ງພຣະອົງໄດ້ຮັບລັດສະໝີ. ນີ້ແມ່ນການຄຸ້ມຄອງຂອງພຣະເຈົ້າ. ດັ່ງນັ້ນ, ຢ່າຄິດວ່າ ພາລະກິດຂອງພຣະເຈົ້າ ຫຼື ການມອບໝາຍຂອງພຣະເຈົ້າທີ່ໃຫ້ກັບພວກເຈົ້າວ່າເປັນເລື່ອງງ່າຍດາຍ. ພວກເຈົ້າເປັນຜູ້ສືບທອດມໍລະດົກແຫ່ງລັດສະໝີຂອງພຣະເຈົ້າທີ່ເໜືອກວ່າສິ່ງໃດຫຼາຍເທົ່າ ແລະ ເປັນນິລັນດອນ ແລະ ນີ້ຄືສິ່ງທີ່ຖືກບັນຊາໂດຍພຣະເຈົ້າເປັນພິເສດ. ຈາກສອງສ່ວນຂອງລັດສະໝີຂອງພຣະອົງ, ສ່ວນໜຶ່ງແມ່ນຖືກສຳແດງໃນຕົວພວກເຈົ້າ; ສ່ວນໜຶ່ງທັງໝົດຂອງລັດສະໝີຂອງພຣະເຈົ້າໄດ້ຖືກປະທານໃຫ້ກັບພວກເຈົ້າ ເພື່ອວ່າມັນຈະເປັນມໍລະດົກຂອງພວກເຈົ້າ. ນີ້ຄືການສັນລະເສີນພຣະເຈົ້າຂອງພວກເຈົ້າ ແລະ ມັນຍັງເປັນແຜນງານທີ່ພຣະອົງໄດ້ກຳນົດໄວ້ລ່ວງໜ້າດົນນານມາແລ້ວ. ເມື່ອເຫັນເຖິງຄວາມຍິ່ງໃຫຍ່ຂອງພາລະກິດຂອງພຣະເຈົ້າທີ່ໄດ້ກະທຳໃນດິນແດນທີ່ມັງກອນແດງທີ່ຍິ່ງໃຫຍ່ອາໄສຢູ່, ຖ້າພາລະກິດນີ້ຖືກຍ້າຍໄປບ່ອນອື່ນ ມັນກໍຈະເກີດຜົນຢ່າງໃຫຍ່ຫຼວງເປັນເວລາດົນແລ້ວ ແລະ ພ້ອມທີ່ຈະຖືກຍອມຮັບໂດຍມະນຸດ. ຍິ່ງໄປກວ່ານັ້ນ, ພາລະກິດນີ້ກໍຈະງ່າຍເກີນໄປ ທີ່ຈະຍອມຮັບເອົາຜູ້ສອນສາສະໜາໃນພາກຕາເວັນຕົກທີ່ເຊື່ອໃນພຣະເຈົ້າ ເນື່ອງຈາກວ່າ ຂັ້ນຕອນຂອງພາລະກິດ ທີ່ພຣະເຢຊູໄດ້ເຮັດເປັນແບບຢ່າງດັ່ງທີ່ເຄີຍມີມາ. ນີ້ຄືເຫດຜົນທີ່ພຣະເຈົ້າບໍ່ສາມາດສຳເລັດຂັ້ນຕອນນີ້ຂອງພາລະກິດໃນການໄດ້ຮັບລັດສະໝີນີ້ຢູ່ໃນບ່ອນອື່ນ; ເມື່ອພາລະກິດໄດ້ຮັບການສະໜັບສະໜູນຈາກຜູ້ຄົນ ແລະ

ເປັນທີ່ຍອມຮັບຂອງບັນດາປະຊາຊາດ, ລັດສະໝີຂອງພຣະເຈົ້າບໍ່ສາມາດຍຶດຄອງໄດ້. ນີ້ຄືຄວາມໝາຍພິເສດທີ່ແຈ່ງແຈ້ງ ເຊິ່ງບາດກ້າວນີ້ຂອງພາລະກິດມີໃນດິນແດນແຫ່ງນີ້. ບໍ່ມີມະນຸດຜູ້ໃດໃນບັນດາພວກເຈົ້າທີ່ໄດ້ຮັບການປົກປ້ອງຈາກພຣະບັນຍັດ; ໃນທາງກົງກັນຂ້າມ, ພວກເຈົ້າຖືກລົງໂທດໂດຍພຣະບັນຍັດ. ທີ່ເປັນບັນຫາຫຼາຍກວ່ານັ້ນກໍ່ຄື ຜູ້ຄົນບໍ່ເຂົ້າໃຈພວກເຈົ້າ: ບໍ່ວ່າຈະເປັນພີ່ນ້ອງຂອງພວກເຈົ້າ, ພໍ່ແມ່ຂອງພວກເຈົ້າ, ໝູ່ເພື່ອນຂອງພວກເຈົ້າ ຫຼື ເພື່ອນຮ່ວມງານຂອງພວກເຈົ້າ, ບໍ່ມີໃຜເຂົ້າໃຈພວກເຈົ້າເລີຍ. ເມື່ອພຣະເຈົ້າປະຖິ້ມພວກເຈົ້າ, ກໍເປັນໄປບໍ່ໄດ້ທີ່ພວກເຈົ້າຈະສືບຕໍ່ອາໄສຢູ່ໃນໂລກ, ແຕ່ເຖິງແນວໃດກໍຕາມ, ຜູ້ຄົນກໍບໍ່ສາມາດຢູ່ຫ່າງຈາກພຣະເຈົ້າໄດ້ ເຊິ່ງແມ່ນຄວາມໝາຍແຫ່ງໄຊຊະນະຂອງພຣະເຈົ້າຕໍ່ຜູ້ຄົນ ແລະ ແມ່ນລັດສະໝີຂອງພຣະເຈົ້າ. ສິ່ງທີ່ພວກເຈົ້າໄດ້ສືບທອດໃນມື້ນີ້ດີເກີນກວ່າສິ່ງທີ່ອັກຄະສາວົກ ແລະ ພະສາດສະດາທັງໝົດຕະຫຼອດຍຸກຕ່າງໆໄດ້ຮັບ ແລະ ຍິ່ງໃຫຍ່ກວ່າສິ່ງທີ່ໂມເຊ ແລະ ເປໂຕໄດ້ຮັບ. ບໍ່ສາມາດຮັບເອົາພຣະພອນພາຍໃນໜຶ່ງມື້ ຫຼື ສອງມື້; ສາມາດຮັບເອົາພຣະພອນຜ່ານການເສຍສະຫຼະອັນຍິ່ງໃຫຍ່. ໝາຍຄວາມວ່າ ພວກເຈົ້າຕ້ອງມີຄວາມຮັກທີ່ຜ່ານການເຮັດໃຫ້ບໍລິສຸດ, ພວກເຈົ້າຕ້ອງມີຄວາມເຊື່ອທີ່ຍິ່ງໃຫຍ່ ແລະ ພວກເຈົ້າຕ້ອງມີຄວາມຈິງຫຼາຍໆຢ່າງທີ່ພຣະເຈົ້າຂໍໃຫ້ພວກເຈົ້າຮັບໄວ້; ນອກຈາກນັ້ນ, ພວກເຈົ້າຕ້ອງຫັນຫາຄວາມຍຸຕິທຳໂດຍບໍ່ຢ້ານກົວ ຫຼື ຫຼີກລ້ຽງ ແລະ ຕ້ອງມີຄວາມຮັກຕໍ່ພຣະເຈົ້າ ເຊິ່ງສິ່ງນັ້ນຄົງຢູ່ຈົນຕາຍ. ພວກເຈົ້າຕ້ອງມີຄວາມເດັດດ່ຽວ, ການປ່ຽນແປງຕ້ອງເກີດຂຶ້ນໃນອຸປະນິໄສຊີວິດຂອງພວກເຈົ້າ; ຄວາມເສື່ອມຊາມຂອງພວກເຈົ້າຕ້ອງຖືກແກ້ໄຂ, ພວກເຈົ້າຕ້ອງຍອມຮັບການຈັດຕຽມທຸກຢ່າງຈາກພຣະເຈົ້າໂດຍບໍ່ຈົ່ມ ແລະ ພວກເຈົ້າຕ້ອງເຊື່ອຟັງຈົນຕາຍ. ນີ້ຄືສິ່ງທີ່ພວກເຈົ້າຄວນໄດ້ຮັບ, ນີ້ຄືຄວາມປະສົງສຸດທ້າຍຂອງພາລະກິດຂອງພຣະເຈົ້າ ແລະ ເປັນສິ່ງທີ່ພຣະເຈົ້າຮ້ອງຂໍຈາກຄົນກຸ່ມນີ້. ເມື່ອພຣະອົງປະທານໃຫ້ກັບພວກເຈົ້າ, ພຣະອົງກໍຈະຂໍສິ່ງຕອບແທນຈາກພວກເຈົ້າຢ່າງແນ່ນອນ ແລະ ຈະເຮັດໃຫ້ພວກເຈົ້າເໝາະສົມກັບຄວາມຕ້ອງການນັ້ນຢ່າງແນ່ນອນ. ດັ່ງນັ້ນ, ມີເຫດຜົນໃນທຸກພາລະກິດທີ່ພຣະເຈົ້າປະຕິບັດ ເຊິ່ງສາມາດເຫັນໄດ້ວ່າ ເປັນຫຍັງພຣະເຈົ້າຈຶ່ງໄດ້ປະຕິບັດພາລະກິດທີ່ມີມາດຕະຖານສູງ ແລະ ເງື່ອນໄຂທີ່ເຄັ່ງຄັດຊໍ້າແລ້ວຊໍ້າອີກ. ດ້ວຍເຫດນີ້ພວກເຈົ້າຈຶ່ງຄວນມີຄວາມເຊື່ອໃນພຣະເຈົ້າ. ສະຫຼຸບກໍຄື ພາລະກິດທຸກຢ່າງຂອງພຣະເຈົ້າຖືກປະຕິບັດເພື່ອຜົນປະໂຫຍດຂອງພວກເຈົ້າ ເພື່ອພວກເຈົ້າອາດຈະເໝາະສົມທີ່ຈະຮັບມໍລະດົກຂອງພຣະອົງ. ນີ້ບໍ່ແມ່ນເພື່ອຜົນປະໂຫຍດຂອງລັດສະໝີຂອງພຣະເຈົ້າເອງ ແຕ່ເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນ ແລະ ເພື່ອເຮັດໃຫ້ຄົນກຸ່ມນີ້ທີ່ໄດ້ຮັບຄວາມເຈັບປວດຢ່າງເລິກເຊິ່ງໃນດິນແດນທີ່ບໍ່ບໍລິສຸດມີຄວາມສົມບູນ. ພວກເຈົ້າຄວນເຂົ້າໃຈຄວາມປະສົງຂອງພຣະເຈົ້າ. ສະນັ້ນ, ເຮົາກໍຂໍຕັກເຕືອນຜູ້ຄົນທີ່ໂງ່ຈ້າທັງຫຼາຍທີ່ບໍ່ມີຄວາມຮູ້ ແລະ ຄວາມສຳນຶກ: ຢ່າທົດສອບພຣະເຈົ້າ ແລະ ຢ່າຕໍ່ຕ້ານອີກເລີຍ. ພຣະເຈົ້າໄດ້ຜ່ານຄວາມທໍລະມານທັງໝົດທີ່ມະນຸດບໍ່ເຄີຍທົນທຸກມາກ່ອນ ແລະ ທົນທຸກຕໍ່ການເຍາະເຍີ້ຍທີ່ຍິ່ງໃຫຍ່ກວ່າແທນທີ່ຂອງມະນຸດດົນນານມາແລ້ວ. ແມ່ນຫຍັງອີກທີ່ພວກເຈົ້າບໍ່ສາມາດປະຖິ້ມໄດ້? ແມ່ນຫຍັງທີ່ສຳຄັນໄປກວ່າຄວາມປະສົງຂອງພຣະເຈົ້າ? ແມ່ນຫຍັງທີ່ສູງສົ່ງກວ່າຄວາມຮັກຂອງພຣະເຈົ້າ? ມັນຍາກພໍແລ້ວສຳລັບ

ພຣະເຈົ້າທີ່ຕ້ອງປະຕິບັດພາລະກິດຂອງພຣະອົງໃນດິນແດນທີ່ບໍ່ບໍລິສຸດນີ້: ຍິ່ງໄປກວ່ານັ້ນ, ຖ້າມະນຸດລະເມີດໂດຍທີ່ຮູ້ ແລະ ຕັ້ງໃຈ, ພາລະກິດຂອງພຣະເຈົ້າກໍຕ້ອງໄດ້ຊັກຊ້າລົງ. ເວົ້າສັ້ນໆກໍ່ຄື, ນີ້ບໍ່ແມ່ນເລື່ອງທີ່ໜ້າສົນໃຈໃຫ້ກັບໃຜເລີຍ ແລະ ບໍ່ມີຜົນປະໂຫຍດໃຫ້ກັບໃຜຄືກັນ. ພຣະເຈົ້າບໍ່ໄດ້ຖືກຜູກມັດກັບເວລາ; ພາລະກິດຂອງພຣະອົງ ແລະ ລັດສະໝີຂອງພຣະອົງແມ່ນມາກ່ອນ. ດ້ວຍເຫດນີ້, ບໍ່ວ່າມັນຈະດົນພຽງໃດກໍຕາມ, ພຣະອົງຈະຈ່າຍລາຄາໃດໆແກ່ພາລະກິດຂອງພຣະອົງ. ນີ້ແມ່ນອຸປະນິໄສຂອງພຣະເຈົ້າ: ພຣະອົງຈະບໍ່ພັກຜ່ອນຈົນກວ່າພາລະກິດຂອງພຣະອົງຈະສຳເລັດ. ພາລະກິດຂອງພຣະອົງຈຶ່ງຈະສາມາດສິ້ນສຸດລົງໄດ້. ເມື່ອພຣະອົງຈະຮັບສ່ວນທີສອງຂອງລັດສະໝີຂອງພຣະອົງ. ໃນທົ່ວທັງຈັກກະວານ, ຖ້າພຣະເຈົ້າບໍ່ສຳເລັດພາລະກິດສ່ວນທີສອງຂອງພຣະອົງໃນການໄດ້ຮັບລັດສະໝີ, ມື້ຂອງພຣະອົງກໍຈະບໍ່ມາຮອດຈັກເທື່ອ, ພຣະຫັດຂອງພຣະອົງກໍຈະບໍ່ອອກມາຈາກຄົນທີ່ພຣະອົງຊົງເລືອກຈັກເທື່ອ, ລັດສະໝີຂອງພຣະອົງຈະບໍ່ລົງມາເຖິງອິດສະຣາເອນ ແລະ ແຜນງານຂອງພຣະອົງຈະບໍ່ສິ້ນສຸດລົງຈັກເທື່ອ. ພວກເຈົ້າຄວນຈະສາມາດເຫັນຄວາມປະສົງຂອງພຣະເຈົ້າ ແລະ ຄວນເຫັນວ່າ ພາລະກິດຂອງພຣະເຈົ້າບໍ່ງ່າຍດາຍຄືກັບການຊົງສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງ. ນັ້ນກໍ່ຍ້ອນວ່າພາລະກິດໃນມື້ນີ້ແມ່ນການປ່ຽນແປງຄົນເຫຼົ່ານັ້ນທີ່ເສື່ອມຊາມ, ຄົນທີ່ບໍ່ມີຄວາມຮູ້ສຶກຫຼາຍທີ່ສຸດ ແລະ ມັນແມ່ນເພື່ອເຮັດໃຫ້ຄົນເຫຼົ່ານັ້ນທີ່ຖືກສ້າງ ແຕ່ຖືກຈັດການໂດຍຊາຕານນັ້ນມີຄວາມບໍລິສຸດ, ບໍ່ແມ່ນການສ້າງອາດາມ ຫຼື ເອວາ, ແຮງໄກທີ່ຈະເປັນການສ້າງແສງສະຫວ່າງ ຫຼື ການສ້າງພືດ ແລະ ສັດທຸກຊະນິດ. ພຣະເຈົ້າເຮັດໃຫ້ທຸກສິ່ງທີ່ຊາຕານເຮັດໃຫ້ເສື່ອມຊາມກັບມາບໍລິສຸດອີກຄັ້ງຈາກນັ້ນກໍ່ເຮັດໃຫ້ພວກເຂົາໄດ້ຮັບອີກຄັ້ງພວກເຂົາກາຍເປັນສິ່ງທີ່ເປັນຂອງພຣະອົງ ແລະ ພວກເຂົາກໍ່ກາຍມາເປັນລັດສະໝີຂອງພຣະອົງ. ສິ່ງນີ້ບໍ່ໄດ້ງ່າຍດາຍຄືກັບທີ່ມະນຸດຈິນຕະນາການ, ມັນບໍ່ງ່າຍຄືກັບການຊົງສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງໃນພວກມັນ ຫຼື ພາລະກິດການສາບແຊ່ງຊາຕານໃຫ້ຕົກລົງໃນເຫວເລິກທີ່ບໍ່ມີບ່ອນສິ້ນສຸດ; ໃນທາງກົງກັນຂ້າມ, ມັນແມ່ນພາລະກິດແຫ່ງການປ່ຽນແປງມະນຸດ, ປ່ຽນສິ່ງຕ່າງໆທີ່ເປັນດ້ານລົບບໍ່ແມ່ນຂອງພຣະອົງ ໃຫ້ກາຍເປັນດ້ານບວກ ແລະ ເປັນຂອງພຣະອົງ. ນີ້ແມ່ນຄວາມຈິງທີ່ຢູ່ເບື້ອງຫຼັງຂັ້ນຕອນນີ້ໃນພາລະກິດຂອງພຣະເຈົ້າ. ພວກເຈົ້າຕ້ອງເຂົ້າໃຈສິ່ງນີ້ ແລະ ຫຼີກລ້ຽງບັນຫາທີ່ງ່າຍດາຍເກີນໄປ. ພາລະກິດຂອງພຣະເຈົ້າບໍ່ຄືກັບພາລະກິດທຳມະດາທົ່ວໄປ. ຄວາມມະຫັດສະຈັນ ແລະ ສະຕິປັນຍາຂອງມັນຢູ່ເໜືອຄວາມຄິດຂອງມະນຸດພຣະເຈົ້າບໍ່ໄດ້ສ້າງທຸກສິ່ງໃນໄລຍະບາດກ້າວນີ້ຂອງພາລະກິດ ແລະ ພຣະອົງກໍ່ບໍ່ໄດ້ທຳລາຍພວກມັນ. ໃນທາງກົງກັນຂ້າມ, ພຣະອົງປ່ຽນແປງທຸກສິ່ງທີ່ພຣະອົງຊົງສ້າງ ແລະ ຊຳລະລ້າງທຸກສິ່ງທີ່ຊາຕານເຮັດໃຫ້ເສຍຄວາມບໍລິສຸດ. ດ້ວຍເຫດນີ້, ພຣະເຈົ້າຈຶ່ງຊົງດຳເນີນກິດຈະການອັນຍິ່ງໃຫຍ່ ເຊິ່ງແມ່ນຄວາມໝາຍທັງໝົດຂອງພາລະກິດຂອງພຣະເຈົ້າ. ເຈົ້າເຫັນໃນພຣະທຳເຫຼົ່ານີ້ວ່າພາລະກິດຂອງພຣະເຈົ້າງ່າຍດາຍແທ້ໆບໍ?

# ເນື່ອງຈາກເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຄວນດຳລົງຊີວິດຢູ່ເພື່ອຄວາມຈິງ

ບັນຫາທົ່ວໄປທີ່ເກີດຂຶ້ນກັບທຸກຄົນກໍຄື ພວກເຂົາເຂົ້າໃຈຄວາມຈິງ ແຕ່ບໍ່ລົ້ມເຫຼວໃນການນຳມັນເຂົ້າສູ່ການປະຕິບັດ. ດ້ານໜຶ່ງກໍ່ຍ້ອນວ່າ ພວກເຂົາບໍ່ເຕັມໃຈທີ່ຈະຈ່າຍລາຄາ ແລະ ອີກຢ່າງກໍຍ້ອນຄວາມເຂົ້າໃຈຂອງພວກເຂົາມີບໍ່ພຽງພໍເກີນໄປ; ພວກເຂົາຈຶ່ງບໍ່ສາມາດເບິ່ງຜ່ານຄວາມຍາກລຳບາກຫຼາຍຢ່າງໃນຊີວິດປະຈຳວັນສຳລັບສິ່ງທີ່ພວກເຂົາເປັນ ແລະ ບໍ່ຮູ້ວິທີປະຕິບັດຢ່າງເໝາະສົມ. ຍ້ອນວ່າປະສົບການຂອງມະນຸດນັ້ນຕື້ນເກີນໄປ, ຄວາມສາມາດຕໍ່າເກີນໄປ ແລະ ລະດັບຄວາມເຂົ້າໃຈເຖິງຄວາມຈິງຂອງພວກເຂົາກໍ່ຈຳກັດ ພວກເຂົາບໍ່ມີທາງແກ້ໄຂຄວາມຍາກລຳບາກທີ່ພວກເຂົາຜະເຊີນໃນຊີວິດປະຈຳວັນໄດ້. ພວກເຂົາເຊື່ອໃນພຣະເຈົ້າພຽງແຕ່ໃນຄຳເວົ້າເທົ່ານັ້ນ ແລະ ບໍ່ສາມາດນຳພຣະເຈົ້າເຂົ້າໄປໃນຊີວິດປະຈຳວັນຂອງພວກເຂົາໄດ້. ເວົ້າອີກຢ່າງໜຶ່ງກໍຄື ພຣະເຈົ້າຄືພຣະເຈົ້າ, ຊີວິດກໍຄືຊີວິດ ແລະ ຄືກັບວ່າ ໃນຊີວິດຂອງເຂົາ, ຜູ້ຄົນບໍ່ມີຄວາມສຳພັນຫຍັງກັບພຣະເຈົ້າເລີຍ. ນັ້ນຄືສິ່ງທີ່ທຸກຄົນຄິດ. ໃນຄວາມເປັນຈິງ ການເຊື່ອພຣະເຈົ້າໃນລັກສະນະນັ້ນ ຈະບໍ່ເຮັດໃຫ້ຜູ້ຄົນຖືກຮັບ ແລະ ເຮັດໃຫ້ສົມບູນໂດຍພຣະອົງ. ແທ້ຈິງແລ້ວ ບໍ່ແມ່ນເປັນຍ້ອນພຣະທຳຂອງພຣະເຈົ້າບໍ່ເປັນທີ່ຮູ້ຈັກຢ່າງສົມບູນ ແຕ່ເປັນຍ້ອນຄວາມສາມາດຂອງຜູ້ຄົນບໍ່ພຽງພໍເກີນໄປໃນການຮັບເອົາພຣະທຳຂອງພຣະອົງ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ເກືອບບໍ່ມີຄົນໃດເລີຍທີ່ເຮັດຕາມຈຸດປະສົງເດີມຂອງພຣະເຈົ້າ; ກົງກັນຂ້າມຄວາມເຊື່ອຂອງພວກເຂົາທີ່ຢູ່ໃນພຣະເຈົ້າແມ່ນຂຶ້ນກັບເຈດຕະນາຂອງພວກເຂົາເອງ, ຄວາມຄິດເຫັນກ່ຽວກັບສາດສະໜາທີ່ພວກເຂົາມີໃນອະດີດ ແລະ ວິທີການເຮັດສິ່ງຕ່າງໆຂອງພວກເຂົາ. ມີພຽງໜ້ອຍຄົນທີ່ຮັບການປ່ຽນແປງຫຼັງຈາກທີ່ຮັບເອົາພຣະທຳຂອງພຣະເຈົ້າ ແລະ ເລີ່ມຕົ້ນເຮັດຕາມຈຸດປະສົງຂອງພຣະອົງ. ກົງກັນຂ້າມ ພວກເຂົາຍຶດໝັ້ນໃນຄວາມເຊື່ອທີ່ຜິດຂອງພວກເຂົາ. ເມື່ອຜູ້ຄົນເລີ່ມຕົ້ນເຊື່ອໃນພຣະເຈົ້າ ພວກເຂົາພຽງແຕ່ເຊື່ອອີງຕາມລະບຽບປະເພນີຂອງສາດສະໜາ ແລະ ພວກເຂົາດຳລົງຊີວິດ ແລະ ມີປະຕິສຳພັນຕໍ່ກັບຄົນອື່ນໂດຍອີງໃສ່ຮາກຖານປັດຊະຍາແຫ່ງຊີວິດຂອງພວກເຂົາເອງ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ກໍລະນີເຊັ່ນນີ້ແມ່ນເກີດຂຶ້ນສຳລັບເກົ້າຄົນໃນທຸກໆສິບຄົນ. ມີພຽງໜ້ອຍຄົນທີ່ກຳນົດແຜນອື່ນ ແລະ ເລີ່ມຕົ້ນຊີວິດໃໝ່ຫຼັງຈາກທີ່ເລີ່ມຕົ້ນເຊື່ອໃນພຣະເຈົ້າ. ມະນຸດລົ້ມເຫຼວໃນການເຮັດຕາມພຣະທຳຂອງພຣະເຈົ້າທີ່ເປັນຄວາມຈິງ ຫຼື ຖືວ່າມັນເປັນຄວາມຈິງ, ປະຕິບັດຕາມັນ.

ຕົວຢ່າງເຊັ່ນ ການເຊື່ອໃນພຣະເຢຊູ. ບໍ່ວ່າຄົນໆໜຶ່ງຫາກໍ່ເລີ່ມເຊື່ອ ຫຼື ເຊື່ອມາເປັນເວລາດົນແລ້ວກໍຕາມ ທຸກຄົນພຽງແຕ່ນຳໃຊ້ "ພອນສະຫວັນ" ທີ່ພວກເຂົາມີ ແລະ ສະແດງໃຫ້ເຫັນເຖິງ "ທັກສະ" ທີ່ພວກເຂົາມີ. ຜູ້ຄົນພຽງແຕ່ເພີ່ມ "ຄວາມເຊື່ອໃນພຣະເຈົ້າ", ເຊິ່ງເປັນຄຳສັບຫ້າຄຳ ເຂົ້າໃນຊີວິດປະຈຳວັນຂອງພວກເຂົາ, ແຕ່ບໍ່ໄດ້ສ້າງຄວາມປ່ຽນແປງຫຍັງໃຫ້ກັບອຸປະນິໄສຂອງພວກເຂົາ ແລະ ຄວາມເຊື່ອຂອງພວກເຂົາໃນພຣະເຈົ້າກໍບໍ່ໄດ້ເຕີບໂຕແມ່ນແຕ່ໜ້ອຍດຽວ. ການສະແຫວງຫາຂອງພວກເຂົາບໍ່ເຢັນບໍ່ຮ້ອນ. ພວກເຂົາບໍ່ໄດ້ເວົ້າວ່າ ພວກເຂົາຈະປະຖິ້ມຄວາມເຊື່ອຂອງພວກເຂົາ, ແຕ່

ພວກເຂົາກໍ່ບໍ່ໄດ້ອຸທິດຕົນໃຫ້ກັບພຣະເຈົ້າທັງໝົດ. ພວກເຂົາບໍ່ເຄີຍຮັກພຣະເຈົ້າຢ່າງແທ້ຈິງ ຫຼື ເຊື່ອຟັງພຣະອົງ. ຄວາມເຊື່ອຂອງພວກເຂົາໃນພຣະເຈົ້າເປັນການປະສົມປະສານລະຫວ່າງຈິງໃຈ ແລະ ແກ້ງເຮັດໄປພ້ອມໆກັນ; ພວກເຂົາຫຍັບເຂົ້າໃກ້ມັນດ້ວຍຕາຂ້າງໜຶ່ງເປີດ ແລະ ຕາອີກຂ້າງປິດຢູ່ ແລະ ບໍ່ຈິງຈັງໃນການປະຕິບັດຄວາມເຊື່ອຂອງພວກເຂົາ. ພວກເຂົາສືບຕໍ່ຢູ່ໃນສະພາວະສັບສົນເຊັ່ນນີ້ ແລະ ຕາຍຢ່າງປິດສະໜາ. ແມ່ນຫຍັງຄືປະເດັນຂອງທຸກສິ່ງເຫຼົ່ານັ້ນ? ວັນນີ້ ເພື່ອເຈົ້າເຊື່ອໃນພຣະເຈົ້າທີ່ແທ້ຈິງ, ເຈົ້າຕ້ອງວາງຕີນບົນ ເສັ້ນທາງທີ່ຖືກຕ້ອງ. ຖ້າເຈົ້າເຊື່ອໃນພຣະເຈົ້າ, ເຈົ້າບໍ່ຄວນສະແຫວງຫາພຽງໄດ້ຮັບພອນເທົ່ານັ້ນ ແຕ່ ສະແຫວງຫາເພື່ອຮັກພຣະເຈົ້າ ແລະ ຮູ້ຈັກພຣະເຈົ້າ. ຜ່ານການສ່ອງສະຫວ່າງຂອງພຣະອົງ ແລະ ຜ່ານການສະແຫວງຫາຂອງເຈົ້າເອງ ເຈົ້າສາມາດກິນ ແລະ ດື່ມພຣະທຳຂອງພຣະອົງ, ສ້າງຄວາມເຂົ້າໃຈທີ່ແທ້ຈິງກ່ຽວກັບພຣະເຈົ້າ ແລະ ມີຄວາມຮັກທີ່ແທ້ຈິງໃຫ້ກັບພຣະເຈົ້າເຊິ່ງມາຈາກຫົວໃຈສ່ວນເລິກຂອງເຈົ້າ. ເວົ້າອີກຢ່າງໜຶ່ງກໍຄື ເມື່ອຄວາມຮັກຂອງເຈົ້າທີ່ໃຫ້ກັບພຣະເຈົ້າແມ່ນແທ້ຈິງທີ່ສຸດ ແລະ ບໍ່ມີໃຜສາມາດທຳລາຍ ຫຼື ຂວາງທາງຄວາມຮັກຂອງເຈົ້າທີ່ໃຫ້ກັບພຣະອົງໄດ້. ເມື່ອນັ້ນ ເຈົ້າຈຶ່ງຈະຢູ່ໃນເສັ້ນທາງທີ່ຖືກຕ້ອງຂອງຄວາມເຊື່ອຂອງເຈົ້າໃນພຣະເຈົ້າ. ສິ່ງນີ້ພິສູດໃຫ້ເຫັນວ່າ ເຈົ້າເປັນຄົນຂອງພຣະເຈົ້າ ຍ້ອນຫົວໃຈຂອງເຈົ້າຢູ່ໃນການຄອບຄອງຂອງພຣະເຈົ້າແລ້ວ ແລະ ບໍ່ມີສິ່ງອື່ນອີກທີ່ສາມາດຄອບຄອງເຈົ້າໄດ້. ຜ່ານປະສົບການຂອງເຈົ້າ, ຜ່ານຜົນຕາມມາທີ່ເຈົ້າໄດ້ຮັບ ແລະ ຜ່ານພາລະກິດຂອງພຣະເຈົ້າ, ເຈົ້າຈຶ່ງສາມາດສ້າງຄວາມຮັກທີ່ບໍ່ມີເງື່ອນໄຂໃຫ້ກັບພຣະເຈົ້າ ແລະ ເມື່ອເຈົ້າເຮັດໄດ້ເຊັ່ນນັ້ນ, ເຈົ້າຈະເປັນອິດສະຫຼະຈາກອິດທິພົນຂອງຊາຕານ ແລະ ຈະມາດຳລົງຊີວິດໃນແສງສະຫວ່າງແຫ່ງພຣະທຳຂອງພຣະເຈົ້າ. ພຽງເມື່ອເຈົ້າໄດ້ຮັບອິດສະຫຼະຈາກອິດທິພົນແຫ່ງຄວາມມືດເທົ່ານັ້ນ ເຈົ້າຈຶ່ງສາມາດເວົ້າໄດ້ວ່າໄດ້ຮັບເອົາພຣະເຈົ້າ. ໃນຄວາມເຊື່ອຂອງເຈົ້າໃນພຣະເຈົ້າ, ເຈົ້າຕ້ອງພະຍາຍາມສະແຫວງຫາເປົ້າໝາຍນີ້. ນີ້ແມ່ນໜ້າທີ່ຂອງພວກເຈົ້າແຕ່ລະຄົນ. ບໍ່ມີພວກເຈົ້າຄົນໃດທີ່ຄວນພໍໃຈກັບສະພາບການປັດຈຸບັນຂອງເລື່ອງຕ່າງໆ. ພວກເຈົ້າບໍ່ສາມາດສອງຈິດສອງໃຈໃນພາລະກິດຂອງພຣະເຈົ້າ ຫຼື ເຈົ້າບໍ່ສາມາດຖືເບົາໃນສິ່ງນັ້ນ. ພວກເຈົ້າຄວນຄິດເຖິງພຣະເຈົ້າຢູ່ທຸກປະການ ແລະ ຕະຫຼອດເວລາ ແລະ ເຮັດທຸກຢ່າງໂດຍເຫັນແກ່ຜົນປະໂຫຍດຂອງພຣະອົງ. ເມື່ອໃດກໍ່ຕາມທີ່ພວກເຈົ້າກ່າວ ຫຼື ກະທຳ ພວກເຈົ້າຄວນເຫັນແກ່ປະໂຫຍດຂອງຄົວເຮືອນຂອງພຣະເຈົ້າກ່ອນ. ເມື່ອນັ້ນ ເຈົ້າຈຶ່ງຈະສາມາດເປັນທີ່ຊອບພຣະທັຍພຣະເຈົ້າ.

ຄວາມຜິດທີ່ໃຫຍ່ຫຼວງຂອງຜູ້ຄົນໃນຄວາມເຊື່ອຂອງພວກເຂົາໃນພຣະເຈົ້າຄືພວກເຂົາເຊື່ອແຕ່ໃນພຣະທຳເທົ່ານັ້ນ ແລະ ພຣະເຈົ້າຫາຍໄປຈາກຊີວິດປະຈຳວັນຂອງພວກເຂົາຢ່າງສິ້ນເຊີງ. ແນ່ນອນທຸກຄົນເຊື່ອໃນການເປັນຢູ່ຂອງພຣະເຈົ້າ ແຕ່ພຣະເຈົ້າບໍ່ແມ່ນສ່ວນໜຶ່ງໃນຊີວິດປະຈຳວັນຂອງພວກເຂົາ. ປາກຂອງຄົນກ່າວຄຳອະທິຖານຫາພຣະເຈົ້າຫຼາຍຄັ້ງ ແຕ່ພຣະເຈົ້າມີພື້ນທີ່ພຽງໜ້ອຍດຽວໃນຫົວໃຈຂອງພວກເຂົາ, ສະນັ້ນ ພຣະເຈົ້າຈຶ່ງທົດລອງພວກເຂົາຊໍ້າແລ້ວຊໍ້າອີກ. ຍ້ອນວ່າພວກເຂົາບໍ່ບໍລິສຸດພຣະເຈົ້າຈຶ່ງບໍ່ມີທາງເລືອກນອກຈາກທົດລອງພວກເຂົາ ເພື່ອວ່າພວກເຂົາອາດຈະຮູ້ສຶກລະອາຍ ແລະ ມາຮູ້ຈັກກັບໂຕພວກເຂົາເອງໃນທ່າມກາງການທົດລອງເຫຼົ່ານີ້. ຖ້າບໍ່ດັ່ງນັ້ນ ມະນຸດຈະກັບກາຍເປັນ

ລູກຫຼານຂອງອັກຄະເທວະດາ ແລະ ເລີ່ມເສື່ອມຊາມຫຼາຍຂຶ້ນເລື້ອຍໆ. ໃນຂະບວນການແຫ່ງຄວາມເຊື່ອຂອງພວກເຂົາໃນພຣະເຈົ້າ ແຕ່ລະຄົນປະຖິ້ມຄວາມຕັ້ງໃຈຫຼາຍຢ່າງ ແລະ ເປົ້າໝາຍພາຍໃຕ້ການຊຳລະລ້າງທີ່ບໍ່ຢຸດຢັ້ງຂອງພຣະເຈົ້າ. ຖ້າບໍ່ດັ່ງນັ້ນ ພຣະເຈົ້າຈະບໍ່ສາມາດໃຊ້ມະນຸດຄົນໃດໄດ້ ແລະ ພຣະເຈົ້າກໍບໍ່ມີທາງເຮັດພາລະກິດທີ່ພຣະອົງຄວນເຮັດໃນຜູ້ຄົນໄດ້. ກ່ອນອື່ນ ພຣະເຈົ້າຊຳລະລ້າງຜູ້ຄົນໃຫ້ບໍລິສຸດ ແລະ ຜ່ານຂະບວນການນີ້ ພວກເຂົາອາດມາຮູ້ຈັກກັບຕົນເອງ ແລະພຣະເຈົ້າອາດປ່ຽນແປງພວກເຂົາ. ເມື່ອນັ້ນເທົ່ານັ້ນ ພຣະເຈົ້າຈຶ່ງສາມາດເຮັດໃຫ້ຊີວິດຂອງພຣະອົງເຂົ້າຫາພວກເຂົາໄດ້ ແລະ ເມື່ອນັ້ນເທົ່ານັ້ນ ຫົວໃຈຂອງພວກເຂົາຈຶ່ງຫັນເຂົ້າຫາພຣະເຈົ້າຢ່າງບໍລິບູນ. ສະນັ້ນເຮົາຈຶ່ງເວົ້າວ່າ ການເຊື່ອໃນພຣະເຈົ້າບໍ່ໄດ້ງ່າຍຄືກັບທີ່ຜູ້ຄົນກ່າວໄວ້. ດັ່ງທີ່ພຣະເຈົ້າເຫັນ ຖ້າເຈົ້າມີພຽງຄວາມຮູ້ ແຕ່ບໍ່ມີພຣະທຳຂອງພຣະອົງເປັນຊີວິດ ແລະ ຖ້າເຈົ້າຖືກຈຳກັດພຽງແຕ່ໃນຄວາມຮູ້ຂອງຕົນເອງ ແຕ່ບໍ່ສາມາດເຮັດຕາມຄວາມຈິງ ຫຼື ດຳລົງຊີວິດຕາມພຣະທຳຂອງພຣະເຈົ້າ, ນີ້ເປັນຫຼັກຖານພິສູດວ່າ ເຈົ້າຍັງບໍ່ມີຫົວໃຈທີ່ຮັກພຣະເຈົ້າ ແລະ ສະແດງໃຫ້ເຫັນວ່າ ຫົວໃຈຂອງເຈົ້າບໍ່ໄດ້ມອບໃຫ້ກັບພຣະເຈົ້າ. ຄົນເຮົາສາມາດມາຮູ້ຈັກພຣະເຈົ້າໂດຍການເຊື່ອໃນພຣະອົງ. ນີ້ແມ່ນເປົ້າໝາຍສຸດທ້າຍ ແລະ ເປັນເປົ້າໝາຍແຫ່ງການສະແຫວງຫາຂອງມະນຸດ. ເຈົ້າຄວນພະຍາຍາມໃນການດຳລົງຊີວິດຕາມພຣະທຳຂອງພຣະເຈົ້າ ເພື່ອພຣະທຳນັ້ນອາດຈະເກີດໝາກຜົນໃນການປະຕິບັດຂອງເຈົ້າ. ຖ້າເຈົ້າມີພຽງຄວາມຮູ້ທາງທິດສະດີ, ຄວາມເຊື່ອຂອງເຈົ້າໃນພຣະເຈົ້າກໍ່ຈະສູນເປົ່າ. ພຽງແຕ່ເຈົ້າເຮັດຕາມ ແລະ ດຳລົງຊີວິດຕາມພຣະທຳຂອງພຣະອົງເທົ່ານັ້ນ ຄວາມເຊື່ອຂອງເຈົ້າຈຶ່ງຈະຖືວ່າສົມບູນ ແລະສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ໃນເສັ້ນທາງນີ້ ຫຼາຍຄົນສາມາດເວົ້າເຖິງຄວາມຮູ້ຕ່າງໆນາໆແຕ່ໃນເວລາແຫ່ງຄວາມຕາຍຂອງພວກເຂົາ ດວງຕາຂອງພວກເຂົາເຕັມໄປດ້ວຍນໍ້າຕາ ແລະ ພວກເຂົາຊັງໂຕເອງທີ່ໃຊ້ເວລາທັງຊີວິດຢ່າງສິ້ນເປືອງ ແລະ ດຳເນີນຊີວິດຢູ່ຈົນແກ່ເຖົ້າຢ່າງສູນເປົ່າ. ພວກເຂົາພຽງແຕ່ເຂົ້າໃຈທິດສະດີ ແຕ່ບໍ່ສາມາດນຳຄວາມຈິງໄປປະຕິບັດ ຫຼື ເປັນພະຍານໃຫ້ກັບພຣະເຈົ້າໄດ້; ກົງກັນຂ້າມ, ພວກເຂົາທີ່ແລ່ນໄປນີ້ແດ່ຫັ້ນແດ່ຄືກັບເຜິ້ງທີ່ຫຍຸ້ງວຽກ ແລະ ເມື່ອພວກເຂົາໃກ້ຕາຍເທົ່ານັ້ນ ພວກເຂົາຈຶ່ງເຫັນໃນຕອນສຸດທ້າຍວ່າ ພວກເຂົາຂາດຄຳພະຍານທີ່ແທ້ຈິງ ເຊິ່ງພວກເຂົາບໍ່ຮູ້ຈັກພຣະເຈົ້າເລີຍ. ສະນັ້ນ ນີ້ບໍ່ແມ່ນເປັນສິ່ງທີ່ຊ້າເກີນໄປບໍ? ເປັນຫຍັງເຈົ້າຈຶ່ງບໍ່ຖືໂອກາດເວລາທີ່ມີຢູ່ແລະ ສະແຫວງຫາຄວາມຈິງທີ່ເຈົ້າຮັກ? ເປັນຫຍັງຕ້ອງຖ້າໃຫ້ຮອດມື້ອື່ນ? ຖ້າໃນຊີວິດ ເຈົ້າບໍ່ໄດ້ທົນທຸກເພື່ອຄວາມຈິງ ຫຼື ສະແຫວງຫາເພື່ອໄດ້ຮັບມັນມາ, ເປັນໄປໄດ້ບໍ່ວ່າ ເຈົ້າຕ້ອງການຄວາມຮູ້ສຶກເສຍໃຈໃນເວລາທີ່ກຳລັງຈະຕາຍ? ຖ້າເປັນດັ່ງນັ້ນ ເປັນຫຍັງຈຶ່ງຕ້ອງເຊື່ອໃນພຣະເຈົ້າ? ໃນຄວາມເປັນຈິງແລ້ວ ມີຫຼາຍຢ່າງທີ່ຜູ້ຄົນສາມາດເຮັດໄດ້ ພຽງແຕ່ເຂົາທຸ້ມເທຄວາມພະຍາຍາມພຽງໜ້ອຍດຽວກໍສາມາດນຳເອົາຄວາມຈິງໄປປະຕິບັດ ແລະ ເປັນທີ່ພໍໃຈພຣະເຈົ້າໄດ້. ຍ້ອນຫົວໃຈຂອງຜູ້ຄົນເຄີຍຖືກຄອບງຳໂດຍຜີຮ້າຍ ພວກເຂົາຈຶ່ງບໍ່ສາມາດປະຕິບັດເພື່ອຜົນປະໂຫຍດຂອງພຣະເຈົ້າໄດ້ ແລະ ຟ້າວຟັ່ງເພື່ອເຫັນແກ່ເນື້ອໜັງຂອງຕົນຢູ່ເລື້ອຍໆ ໂດຍມີຫຍັງທີ່ຈະສະແດງໃຫ້ເຫັນໃນທີ່ສຸດ. ຍ້ອນເຫດຜົນເຫຼົ່ານີ້ຜູ້ຄົນຈຶ່ງປະສົບກັບບັນຫາ ແລະ ຄວາມຍາກລຳບາກຢູ່ເລື້ອຍໆ. ສິ່ງເຫຼົ່ານີ້ບໍ່ແມ່ນຄວາມທໍລະມານ

ຂອງຊາຕານບໍ? ນີ້ບໍ່ແມ່ນຄວາມເສື່ອມຊາມຂອງເນື້ອໜັງບໍ? ເຈົ້າບໍ່ຄວນພະຍາຍາມຫຼອກລວງພຣະເຈົ້າໂດຍການຮັບໃຊ້ແຕ່ປາກ. ກົງກັນຂ້າມ ເຈົ້າຕ້ອງເລີ່ມປະຕິບັດໃຫ້ມັນຈັບຕ້ອງໄດ້. ຢ່າຫຼອກລວງໂຕເອງ; ເຮັດແບບນັ້ນຈະໄດ້ປະໂຫຍດຫຍັງ? ເຈົ້າຈະໄດ້ຮັບຫຍັງຈາກການດຳເນີນຊີວິດໂດຍເຫັນແກ່ເນື້ອໜັງຂອງໂຕເຈົ້າເອງ ແລະ ດີ້ນລົນເພື່ອຜົນປະໂຫຍດ ແລະ ຊື່ສຽງ?

# ສຽງຟ້າຮ້ອງທັງເຈັດກຳລັງທຳນາຍວ່າ ຂ່າວປະເສີດແຫ່ງອານາຈັກ ຈະແຜ່ຂະຫຍາຍໄປທົ່ວຈັກກະວານ

ເຮົາກຳລັງເຜີຍແຜ່ພາລະກິດຂອງເຮົາທ່າມກາງຊາວຕ່າງຊາດ. ສະຫງ່າລາສີຂອງເຮົາແມບເຫຼື້ອມທົ່ວຈັກກະວານ; ຄົນທຸກປະເພດມີຄວາມປະສົງຂອງເຮົາຢູ່ພາຍໃນພວກເຂົາ ແລະ ທຸກຄົນຖືກຊີ້ນຳໂດຍມືຂອງເຮົາ ແລະ ເລີ່ມປະຕິບັດພາລະໜ້າທີ່ທີ່ເຮົາມອບໝາຍໃຫ້. ເລີ່ມແຕ່ຈຸດນີ້ໄປ ເຮົາໄດ້ເຂົ້າສູ່ຍຸກໃໝ່ ແລະ ນຳເອົາມວນມະນຸດໄປສູ່ໂລກອື່ນ. ເມື່ອເຮົາໄດ້ກັບມາສູ່ "ແຜ່ນດິນເກີດ" ຂອງເຮົາ ເຮົາກໍໄດ້ເລີ່ມປະຕິບັດອີກສ່ວນໜຶ່ງຂອງພາລະກິດໃນແຜນການເດີມຂອງເຮົາ ເພື່ອວ່າມະນຸດຈະໄດ້ຮູ້ຈັກເຮົາເລິກເຊິ່ງຍິ່ງຂຶ້ນ. ເຮົາເບິ່ງຈັກກະວານທັງໝົດ ແລະ ເຫັນວ່າ[ກ] ນີ້ຄືໂອກາດສຳລັບພາລະກິດຂອງເຮົາ, ສະນັ້ນ ເຮົາຈຶ່ງຟ້າວໄປຟ້າວມາ ເພື່ອກະທຳພາລະກິດໃໝ່ຂອງເຮົາໃນມະນຸດ. ໃນທີ່ສຸດແລ້ວນີ້ແມ່ນຍຸກໃໝ່ ແລະ ເຮົາໄດ້ນຳເອົາພາລະກິດໃໝ່ມາ ເພື່ອຮັບເອົາຄົນໃໝ່ເຂົ້າສູ່ຍຸກໃໝ່ເພີ່ມຂຶ້ນ ແລະປະຖິ້ມຜູ້ທີ່ເຮົາຈະໂຍນອອກໃຫ້ຫຼາຍຂຶ້ນ. ໃນຊົນຊາດຂອງມັງກອນແດງທີ່ຍິ່ງໃຫຍ່ ເຮົາໄດ້ດຳເນີນຂັ້ນຕອນໜຶ່ງຂອງພາລະກິດທີ່ມະນຸດບໍ່ອາດສາມາດເຂົ້າໃຈໄດ້, ເຮັດໃຫ້ພວກເຂົາໄກວໄປມາຕາມລົມເຊິ່ງຫຼັງຈາກນັ້ນ ຫຼາຍຄົນກໍຖືກພັດໄປກັບສາຍລົມຢ່າງງຽບໆ. ຄວາມຈິງແລ້ວ ນີ້ແມ່ນ "ພື້ນລານຟາດເຂົ້າ" ທີ່ເຮົາກຳລັງຈະປັດກວດ; ມັນແມ່ນສິ່ງທີ່ເຮົາຕ້ອງການ ແລະ ພ້ອມນີ້ ມັນຄືແຜນການຂອງເຮົາ. ເພາະວ່າ ຄົນຊົ່ວຮ້າຍທັງຫຼາຍໄດ້ພາກັນຢ່ອງເຂົ້າມາ ໃນຂະນະທີ່ເຮົາປະຕິບັດພາລະກິດຢູ່ນັ້ນ, ແຕ່ເຮົາບໍ່ຟ້າວຟັ່ງທີ່ຈະຂັບໄລ່ພວກເຂົາໜີ. ກົງກັນຂ້າມ ເຮົາຈະທຳລາຍພວກເຂົາໃຫ້ແຕກກະຈາຍ ເມື່ອເຖິງເວລາອັນສົມຄວນ. ແລ້ວຫຼັງຈາກນັ້ນ ເຮົາຈະໄດ້ເປັນນໍ້າພຸແຫ່ງຊີວິດ ທີ່ເຮັດໃຫ້ຜູ້ທີ່ຮັກເຮົາຢ່າງແທ້ຈິງໄດ້ຮັບໝາກໄມ້ຂອງຕົ້ນເດື່ອ ແລະ ກິ່ນຫອມຂອງດອກລິນລີ່ຈາກເຮົາ. ໃນດິນແດນທີ່ມີຊາຕານພັກເຊົາ, ດິນແດນແຫ່ງຝຸ່ນລະອອງ, ໃນນັ້ນຍັງບໍ່ມີຄຳບໍລິສຸດ, ມີແຕ່ດິນຊາຍ ແລະ ດັ່ງນັ້ນ ເຮົາຈຶ່ງພົບກັບສະພາບແວດລ້ອມເຫຼົ່ານີ້. ເຈົ້າຄວນຮູ້ວ່າສິ່ງທີ່ເຮົາຮັບເອົາ ຄືກ້ອນຄຳທີ່ບໍລິສຸດ, ຄຳທີ່ຖືກຫຼໍ່ຫຼອມໃຫ້ສະອາດ, ບໍ່ແມ່ນດິນຊາຍ. ແລ້ວຄົນຊົ່ວຮ້າຍຈະຢູ່ໃນເຮືອນຂອງເຮົາໄດ້ແນວໃດ? ເຮົາຈະສາມາດປ່ອຍໃຫ້ໝາຈອກເປັນໝອນໃນດິນແດນສະຫວັນຂອງເຮົາໄດ້ແນວໃດ? ເຮົາໃຊ້ທຸກວິທີການທີ່ຜໍຈະຄິດໄດ້ເພື່ອຂັບໄລ່ສິ່ງເຫຼົ່ານີ້ໜີ. ກ່ອນຄວາມປະສົງຂອງເຮົາຈະຖືກເປີດເຜີຍ ບໍ່ມີໃຜຮູ້ໃນສິ່ງທີ່ເຮົາກຳລັງຈະເຮັດ. ເຮົາຖືເອົາໂອກາດນີ້ ຂັບໄລ່ຄົນຊົ່ວຮ້າຍເຫຼົ່ານັ້ນໜີ ແລະ ພວກເຂົາຖືກບັງຄັບໃຫ້ໜີພົ້ນຈາກໜ້າເຮົາ. ນີ້ແມ່ນສິ່ງທີ່ເຮົາເຮັດຕໍ່ຄົນຊົ່ວຮ້າຍ ແຕ່ວ່າຍັງຈະມີມື້ໜຶ່ງທີ່ພວກເຂົາຈະໃຫ້ບໍລິການເຮົາ. ຄວາມປາຖະໜາຢາກໄດ້ພອນຂອງມະນຸດຍັງສູງຫຼາຍເກີນໄປ; ສະນັ້ນ ເຮົາຈຶ່ງຫັນກັບໄປ ແລະ ສະແດງໃບໜ້າອັນສະຫງ່າລາສີຂອງເຮົາຕໍ່ຊາວຕ່າງຊາດ ເພື່ອມະນຸດຈະໄດ້ດຳລົງຊີວິດໃນໂລກຂອງພວກເຂົາ

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ "ເຫັນວ່າ".

ແລະ ຕັດສິນຕົວເອງ, ໃນຂະນະທີ່ ເຮົາສືບຕໍ່ກ່າວພຣະທຳທີ່ເຮົາຄວນກ່າວ ແລະ ສະໜອງສິ່ງທີ່ມະນຸດຕ້ອງການໃຫ້ແກ່ພວກເຂົາ. ເມື່ອມະນຸດຮູ້ສຶກຕົວ ເຮົາກໍຈະໄດ້ເຜີຍແຜ່ພຣະທຳຂອງເຮົາໄປດົນນານແລ້ວ. ເມື່ອນັ້ນ, ເຮົາຈະສະແດງຄວາມປະສົງຂອງເຮົາຕໍ່ມະນຸດ ແລະ ເລີ່ມປະຕິບັດສ່ວນທີສອງພາລະກິດຂອງເຮົາໃນມະນຸດ, ເຮັດໃຫ້ມວນມະນຸດຕິດຕາມເຮົາຢ່າງໃກ້ຊິດ ເພື່ອປະສານງານກັບພາລະກິດຂອງເຮົາ ແລະ ໃຫ້ມະນຸດເຮັດທຸກຢ່າງດ້ວຍຄວາມສາມາດຂອງພວກເຂົາເພື່ອດຳເນີນພາລະກິດກັບເຮົາ ທີ່ເຮົາຕ້ອງປະຕິບັດ.

ບໍ່ມີໃຜເຊື່ອວ່າ ພວກເຂົາຈະເຫັນສະຫງ່າລາສີຂອງເຮົາ ແລະ ເຮົາຈະບໍ່ບັງຄັບພວກເຂົາ, ແຕ່ກົງກັນຂ້າມ ເຮົາຈະເອົາຄວາມສະຫງ່າລາສີຂອງເຮົາອອກຈາກທ່າມກາງມະນຸດ ແລະ ນຳໄປໄວ້ທີ່ໂລກອື່ນ. ເມື່ອມະນຸດສຳນຶກຜິດອີກຄັ້ງ, ເມື່ອນັ້ນເຮົາຈະນຳເອົາຄວາມສະຫງ່າລາສີຂອງເຮົາ ແລະ ສະແດງມັນຕໍ່ຜູ້ທີ່ມີຄວາມເຊື່ອເຫຼົ່ານັ້ນ. ນີ້ແມ່ນຫຼັກການ ທີ່ເຮົາປະຕິບັດພາລະກິດ. ຍ້ອນມີເວລາທີ່ຄວາມສະຫງ່າລາສີຂອງເຮົາອອກຈາກການາອານ ແລະ ຍັງມີເວລາທີ່ສະຫງ່າລາສີຂອງເຮົາຈະອອກຈາກຜູ້ຄົນທີ່ຖືກເລືອກ. ຍິ່ງໄປກວ່ານັ້ນ ມີເວລາທີ່ສະຫງ່າລາສີຂອງເຮົາອອກຈາກແຜ່ນດິນໂລກ ໂດຍເຮັດໃຫ້ໂລກນີ້ມືດລົງ ແລະ ຈົມຢູ່ກັບຄວາມມືດ. ແມ່ນແຕ່ດິນແດນຂອງການາອານກໍຈະບໍ່ເຫັນແສງຕາເວັນ; ມະນຸດທຸກຄົນຈະສູນເສຍຄວາມເຊື່ອຂອງພວກເຂົາ, ແຕ່ບໍ່ມີຜູ້ໃດຈະສາມາດໜີຈາກກິ່ນຫອມອາຍດິນແດນການາອານໄດ້. ມີແຕ່ເມື່ອເຮົາໄດ້ຜ່ານເຂົ້າສູ່ສະຫວັນ ແລະ ແຜ່ນດິນໂລກແຫ່ງໃໝ່ ເຮົາຈະເອົາອີກສ່ວນໜຶ່ງຂອງສະຫງ່າລາສີຂອງເຮົາມາເປີດເຜີຍເປັນຄັ້ງທຳອິດໃນດິນແດນການາອານ, ເຮັດໃຫ້ເກີດມີແສງສະຫວ່າງອ່ອນໆສ່ອງໄປທົ່ວແຜ່ນດິນໂລກ ທີ່ຈົມຢູ່ໃນຄວາມມືດສະນິດແຫ່ງຍາມຄໍ່າຄືນ ເພື່ອເຮັດໃຫ້ແຜ່ນດິນໂລກທັງໝົດມາສູ່ຄວາມສະຫວ່າງ; ໃຫ້ມະນຸດທົ່ວແຜ່ນດິນໂລກໄດ້ດຶງດູດເອົາກຳລັງຈາກພະລັງແຫ່ງແສງສະຫວ່າງ, ເຮັດໃຫ້ສະຫງ່າລາສີຂອງເຮົາເພີ່ມຂຶ້ນແລະ ປາກົດຂຶ້ນໃໝ່ຕໍ່ທຸກຊົນຊາດ; ແລ້ວເພື່ອໃຫ້ມະນຸດຊາດທັງປວງຮັບຮູ້ວ່າເຮົາໄດ້ມາສູ່ໂລກມະນຸດນີ້ແຕ່ດົນນານແລ້ວ ແລະ ໄດ້ນຳເອົາຄວາມສະຫງ່າລາສີຂອງເຮົາຈາກອິດສະຣາເອນໄປສູ່ທິດຕາເວັນອອກຕັ້ງແຕ່ດົນນານແລ້ວ; ຍ້ອນສະຫງ່າລາສີຂອງເຮົາໄດ້ສ່ອງແສງຈາກທິດຕາເວັນອອກ ແລະມັນເປັນບ່ອນທີ່ມັນຖືກນຳມາຈາກຍຸກແຫ່ງພຣະຄຸນຈົນເຖິງທຸກວັນນີ້. ແຕ່ມັນຄືອິດສະຣາເອນທີ່ເຮົາຈາກມາ ແລະ ຈາກທີ່ນັ້ນ ເຮົາຈຶ່ງໄດ້ມາເຖິງທິດຕາເວັນອອກ. ເມື່ອແສງສະຫວ່າງແຫ່ງທິດຕາເວັນອອກຄ່ອຍໆກາຍເປັນສີຂາວ ເມື່ອນັ້ນຄວາມມືດທົ່ວແຜ່ນດິນໂລກກໍຈະເລີ່ມຫັນສູ່ແສງສະຫວ່າງ ແລະ ມີແຕ່ເມື່ອນັ້ນ ມະນຸດກໍຈະຄົ້ນພົບວ່າເຮົາໄດ້ໄປຈາກອິດສະຣາເອນແຕ່ດົນນານແລ້ວ ແລະປາກົດຕົວໃໝ່ອີກຄັ້ງໃນທິດຕາເວັນອອກ. ເມື່ອເຄີຍລົງມາສູ່ດິນແດນອິດສະຣາເອນຄັ້ງໜຶ່ງແລ້ວ, ເຮົາບໍ່ສາມາດບັງເກີດໃນອິດສະຣາເອນອີກຄັ້ງ, ເພາະວ່າພາລະກິດຂອງເຮົາຈະນຳພາຈັກກະວານທັງໝົດ ແລະ ຍິ່ງໄປກວ່ານັ້ນ ຟ້າແມບເຫຼື້ອມສ່ອງແສງຈາກທິດຕາເວັນອອກສູ່ທິດຕາເວັນຕົກໂດຍກົງ. ດ້ວຍເຫດນີ້, ເຮົາໄດ້ລົງມາໃນທິດຕາເວັນອອກ ແລະ ນຳເອົາການາອານມາສູ່ຜູ້ຄົນໃນທິດຕາເວັນອອກ. ເຮົາຈະນຳເອົາຜູ້ຄົນຈາກທົ່ວແຜ່ນດິນໂລກໄປສູ່ດິນແດນຂອງການາອານ ແລະ ດັ່ງນັ້ນ ເຮົາຈະ

ສືບຕໍ່ກ່າວພຣະຄຳໃນດິນແດນຂອງການາອານເພື່ອຄວບຄຸມຈັກກະວານທັງໝົດ. ໃນເວລານີ້ ບໍ່ມີແສງສະຫວ່າງໃນທົ່ວໂລກ ຍົກເວັ້ນຈາກການາອານ ແລະ ມະນຸດທຸກຄົນແມ່ນສ່ຽງຕໍ່ຄວາມອຶດຫິວ ແລະ ຄວາມໜາວ. ເຮົາໄດ້ມອບຄວາມສະຫງ່າລາສີຂອງເຮົາໃຫ້ແກ່ອິດສະຣາເອນ ແລະ ຕໍ່ມາກໍໄດ້ນຳເອົາມັນອອກໄປ, ແລ້ວກໍ່ໄດ້ນຳເອົາຊາວອິດສະຣາເອນໄປສູ່ທິດຕາເວັນອອກ ແລະ ມະນຸດຊາດທັງປວງໄປສູ່ທິດຕາເວັນອອກ. ເຮົາໄດ້ນຳເອົາພວກເຂົາທັງໝົດມາສູ່ຄວາມສະຫວ່າງ ເພື່ອວ່າພວກເຂົາອາດຈະໄດ້ກັບໄປຢູ່ຮ່ວມກັນໃໝ່ ແລະ ມີຄວາມສຳພັນກັບມັນ ແລະ ບໍ່ຈຳເປັນຕ້ອງຊອກຫາຄວາມສະຫວ່າງນັ້ນອີກຕໍ່ໄປ. ເຮົາຈະເຮັດໃຫ້ທຸກຄົນທີ່ສະແຫວງຫາໄດ້ເຫັນແສງສະຫວ່າງອີກຄັ້ງ ແລະ ເຫັນຄວາມສະຫງ່າລາສີທີ່ເຮົາເຄີຍມີໃນອິດສະຣາເອນ; ເຮົາຈະເຮັດໃຫ້ພວກເຂົາເຫັນວ່າ ເຮົາໄດ້ລົງມາເທິງກ້ອນເມກສີຂາວສູ່ທ່າມກາງມະນຸດຊາດແຕ່ດົນນານແລ້ວ, ເຮັດໃຫ້ພວກເຂົາເຫັນກ້ອນເມກສີຂາວຈຳນວນນັບບໍ່ຖ້ວນ ແລະ ເຫັນພົ້ວໝາກໄມ້ທີ່ອຸດົມສົມບູນ ແລະ ຍິ່ງໄປກວ່ານັ້ນ ກໍໃຫ້ພວກເຂົາເຫັນພຣະເຈົ້າພຣະເຢໂຮວາແຫ່ງອິດສະຣາເອນ. ເຮົາຈະເຮັດໃຫ້ພວກເຂົາເຫັນເຈົ້ານາຍຂອງຄົນຢິວ, ພຣະເມຊີອາທີ່ປາຖະໜາມາເປັນເວລາດົນ ແລະ ການປາກົດຕົວທັງໝົດຂອງເຮົາ ເຊິ່ງເປັນຜູ້ທີ່ຖືກຂົ່ມເຫັງໂດຍກະສັດທັງຫຼາຍຕະຫຼອດຫຼາຍຍຸກຫຼາຍສະໄໝ. ເຮົາຈະປະຕິບັດພາລະກິດໃນຈັກກະວານທັງໝົດ ແລະ ເຮົາຈະປະຕິບັດພາລະກິດທີ່ຍິ່ງໃຫຍ່, ເປີດເຜີຍຄວາມສະຫງ່າລາສີທັງໝົດຂອງເຮົາ ແລະ ການກະທຳທັງໝົດຂອງເຮົາຕໍ່ມະນຸດໃນຍຸກສຸດທ້າຍ. ເຮົາຈະສະແດງໃບໜ້າທີ່ມີສະຫງ່າລາສີຂອງເຮົາທັງໝົດຕໍ່ຜູ້ຄົນທີ່ໄດ້ລໍຄອຍເຮົາເປັນເວລາຫຼາຍປີ, ຕໍ່ຜູ້ຄົນທີ່ໄດ້ປາຖະໜາໃຫ້ເຮົາມາເທິງກ້ອນເມກສີຂາວ, ຕໍ່ອິດສະຣາເອນທີ່ໄດ້ປາຖະໜາໃຫ້ເຮົາປາກົດຕົວອີກຄັ້ງ ແລະ ຕໍ່ມະນຸດຊາດທີ່ໄດ້ຂົ່ມເຫັງເຮົາ ເພື່ອວ່າທຸກຄົນຈະຮູ້ວ່າເຮົາໄດ້ເອົາຄວາມສະຫງ່າລາສີອອກຈາກພວກເຂົາແຕ່ດົນແລ້ວ ແລະ ໄດ້ນຳເອົາຄວາມສະຫງ່າລາສີນັ້ນກັບມາສູ່ທິດຕາເວັນອອກ ແລະ ມັນຈະບໍ່ໄດ້ຢູ່ຢູດາຍອີກຕໍ່ໄປ. ຍ້ອນຍຸກສຸດທ້າຍໄດ້ມາເຖິງແລ້ວ!

ໃນທົ່ວຈັກກະວານເຮົາກຳລັງດຳເນີນພາລະກິດຂອງເຮົາ ແລະ ໃນທິດຕາເວັນອອກ, ສຽງຟ້າຮ້ອງດັງໄດ້ປາກົດຂຶ້ນຢ່າງບໍ່ສິ້ນສຸດ, ສັ່ນສະເທືອນທຸກຊົນຊາດ ແລະ ທຸກນິກາຍ. ມັນແມ່ນສຽງຂອງເຮົາທີ່ໄດ້ນຳພາທຸກຄົນໃນປັດຈຸບັນ. ເຮົາເຮັດໃຫ້ທຸກຄົນຖືກເອົາຊະນະດ້ວຍສຽງຂອງເຮົາ, ໃຫ້ຕົກລົງສູ່ກະແສນີ້ ແລະ ຍອມຈຳນົນຕໍ່ໜ້າເຮົາ, ເພາະວ່າເຮົາໄດ້ທວງສະຫງ່າລາສີຂອງເຮົາຈາກທົ່ວໂລກ ແລະ ໄດ້ສ້າງມັນຂຶ້ນໃໝ່ໃນພາກຕາເວັນອອກ. ຜູ້ໃດຈະບໍ່ຢາກເຫັນສະຫງ່າລາສີຂອງເຮົາ? ຜູ້ໃດຈະບໍ່ລໍຖ້າດ້ວຍໃຈຕື່ນເຕັ້ນໃນການກັບມາຂອງເຮົາ? ຜູ້ໃດຈະບໍ່ປາຖະໜາຢາກເຫັນການປາກົດຕົວຂອງເຮົາ? ຜູ້ໃດຈະບໍ່ຄິດຮອດຄວາມເປັນຕາຮັກຂອງເຮົາ? ຜູ້ໃດທີ່ຈະບໍ່ຢາກມາສູ່ແສງສະຫວ່າງ? ຜູ້ໃດຈະບໍ່ຢາກເບິ່ງ ບໍ່ຢາກເຫັນຄວາມຮັ່ງມີຂອງການາອານ? ຜູ້ໃດຈະບໍ່ປາຖະໜາການກັບມາຂອງພຣະຜູ້ໄຖ່? ຜູ້ໃດຈະບໍ່ນັບຖືພຣະອົງຜູ້ທີ່ມີລິດອຳນາດທີ່ຍິ່ງໃຫຍ່? ສຽງຂອງເຮົາຈະແຜ່ຂະຫຍາຍໄປທົ່ວແຜ່ນດິນໂລກ; ເຮົາຈະພົບກັບຜູ້ຄົນທີ່ຖືກເລືອກຂອງເຮົາ ແລະ ກ່າວພຣະທຳຕໍ່ພວກເຂົາຫຼາຍຂຶ້ນ. ເໝືອນດັ່ງສຽງຟ້າຮ້ອງທີ່ດັງສະນັ່ນສັ່ນສະເທືອນພູເຂົາ ແລະ ແມ່ນ້ຳລຳທານ, ເຮົາກ່າວພຣະຄຳຂອງເຮົາຕໍ່ຈັກກະວານ

ທັງປວງ ແລະ ມະນຸດຊາດ. ດັ່ງນັ້ນພຣະທຳທີ່ຢູ່ໃນປາກຂອງເຮົາໄດ້ກາຍເປັນສົມບັດຂອງມະນຸດ ແລະ ມະນຸດທຸກຄົນລ້ວນແຕ່ຖະໜອມພຣະຄຳຂອງເຮົາ. ສາຍຟ້າແມບຈາກຕາເວັນອອກໄປເຖິງຕາເວັນຕົກ. ພຣະຄຳຂອງເຮົາເຮັດໃຫ້ມະນຸດລັງເລທີ່ຈະຍອມສະຫຼະພວກມັນ ແລະ ໃນເວລາດຽວກັນກໍພົບວ່າ ພຣະທຳເຫຼົ່ານັ້ນເປັນສິ່ງທີ່ບໍ່ສາມາດຢັ່ງເຖິງ, ແຕ່ຊື່ນຊົມຍິນດີໃນທຸກສິ່ງຫຼາຍຂຶ້ນກວ່າເດີມ. ມະນຸດທຸກຄົນຍິນດີ ແລະ ມີຄວາມສຸກ, ສະເຫຼີມສະຫຼອງການມາຂອງເຮົາ ເປັນຄືກັບວ່າເດັກນ້ອຍຫາກໍ່ເກີດ. ດ້ວຍສຽງຂອງເຮົາ, ເຮົາຈະນຳເອົາມະນຸດທັງປວງມາຢູ່ຕໍ່ໜ້າຂອງເຮົາ. ຈາກນັ້ນ ເຮົາຈະເຂົ້າສູ່ເຊື້ອຊາດມະນຸດຢ່າງເປັນທາງການ ເພື່ອວ່າພວກເຂົາໄດ້ມານະມັດສະການເຮົາ. ດ້ວຍສະຫງ່າລາສີທີ່ເຮົາສ່ອງແສງອອກມາ ແລະ ພຣະທຳທີ່ຢູ່ໃນປາກຂອງເຮົາ, ເຮົາຈະເຮັດໃຫ້ທຸກຄົນມາກົ້ມຫົວລົງຕໍ່ໜ້າເຮົາ ແລະ ເຫັນແສງຟ້າແມບສິ່ງແສງສະຫວ່າງມາຈາກທິດຕາເວັນອອກ ແລະ ນັ້ນໝາຍຄວາມວ່າເຮົາໄດ້ລົງມາຍັງ "ພູເຂົາໝາກກອກ" ແຫ່ງທິດຕາເວັນອອກ. ພວກເຂົາຈະເຫັນວ່າເຮົາໄດ້ຢູ່ໂລກນີ້ມາດົນນານແລ້ວ, ບໍ່ແມ່ນບຸດຊາຍຂອງຊາວຢິວອີກຕໍ່ໄປແຕ່ເປັນແສງຟ້າແມບແຫ່ງທິດຕາເວັນອອກ. ເພາະວ່າເຮົາໄດ້ຟື້ນຄືນຊີບມາດົນນານແລ້ວ ແລະ ໄດ້ພັດພາກຈາກທ່າມກາງມະນຸດ ແລ້ວໄດ້ກັບມາປາກົດຕົວໃໝ່ດ້ວຍສະຫງ່າລາສີໃນທ່າມກາງມະນຸດ. ເຮົາເປັນຜູ້ທີ່ຖືກເຄົາລົບບູຊາມາຫຼາຍຍຸກຫຼາຍສະໄໝກ່ອນໜ້ານີ້ ແລະ ເຮົາຍັງເປັນເດັກນ້ອຍທີ່ຖືກຊາວອິດສະຣາເອນປະຖິ້ມມາຫຼາຍຍຸກຫຼາຍສະໄໝກ່ອນໜ້ານີ້. ຍິ່ງໄປກວ່ານັ້ນ ເຮົາເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດທີ່ມີສະຫງ່າລາສີຢ່າງສົມບູນໃນຍຸກປັດຈຸບັນ! ໃຫ້ທຸກຄົນມາຢູ່ຕໍ່ຫນ້າບັນລັງຂອງເຮົາ ແລະ ເບິ່ງໃບໜ້າອັນສະຫງ່າລາສີຂອງເຮົາ, ຟັງສຽງຂອງເຮົາ ແລະ ຫຼຽວເບິ່ງການກະທຳຂອງເຮົາ. ນີ້ແມ່ນຄວາມປະສົງທັງໝົດຂອງເຮົາ; ມັນແມ່ນຈຸດສິ້ນສຸດ ແລະ ຈຸດສູງສຸດຂອງແຜນການຂອງເຮົາ, ພ້ອມທັງເປັນຈຸດປະສົງຂອງການຄຸ້ມຄອງຂອງເຮົາ ເພື່ອໃຫ້ທຸກຊົນຊາດນະມັດສະການເຮົາ, ໃຫ້ທຸກພາສາຮັບຮູ້ເຮົາ, ໃຫ້ມະນຸດທຸກຄົນຍຶດໝັ້ນຄວາມເຊື່ອຂອງເຂົາໃນຕົວເຮົາ ແລະ ໃຫ້ທຸກຄົນຢູ່ພາຍໃຕ້ເຮົາ!

# ຄວາມແຕກຕ່າງທີ່ສຳຄັນລະຫວ່າງ ພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ຜູ້ຄົນທີ່ຖືກໃຊ້ໂດຍພຣະເຈົ້າ

ພຣະວິນຍານຂອງພຣະເຈົ້າໄດ້ຊອກຫາເປັນເວລາຫຼາຍປີ ໃນຂະນະທີ່ພຣະອົງປະຕິບັດພາລະກິດຢູ່ເທິງແຜ່ນດິນໂລກ ແລະ ພຣະເຈົ້າໄດ້ນຳໃຊ້ຜູ້ຄົນຫຼາຍຄົນເພື່ອປະຕິບັດພາລະກິດຂອງພຣະອົງຕະຫຼອດຍຸກຕ່າງໆ. ແຕ່ເຖິງຢ່າງນັ້ນກໍຕາມ ພຣະວິນຍານຂອງພຣະເຈົ້າກໍຍັງບໍ່ມີບ່ອນພັກຜ່ອນທີ່ເໝາະສົມ ເຊິ່ງນີ້ແມ່ນເຫດຜົນທີ່ພຣະເຈົ້າປ່ຽນຜູ້ຄົນຕ່າງໆໃນການເຮັດພາລະກິດຂອງພຣະອົງ. ໂດຍລວມແລ້ວ ພາລະກິດຂອງພຣະອົງແມ່ນຖືກເຮັດຜ່ານຜູ້ຄົນ. ນັ້ນໝາຍຄວາມວ່າ ຫຼາຍປີຜ່ານມາພາລະກິດຂອງພຣະເຈົ້າ ແມ່ນບໍ່ເຄີຍຢຸດ ແຕ່ສືບຕໍ່ດຳເນີນຢູ່ໃນມະນຸດເລື້ອຍມາຈົນເຖິງທຸກວັນນີ້. ເຖິງແມ່ນວ່າພຣະເຈົ້າໄດ້ກ່າວພຣະທຳຫຼາຍພຽງໃດ ແລະ ໄດ້ປະຕິບັດພາລະກິດຫຼາຍເທົ່າໃດກໍຕາມແຕ່ມະນຸດກໍຍັງບໍ່ຮູ້ຈັກພຣະເຈົ້າ ເຊິ່ງນັ້ນກໍເນື່ອງຈາກວ່າພຣະເຈົ້າບໍ່ເຄີຍປາກົດຕົວໃຫ້ມະນຸດໄດ້ເຫັນ ແລະ ພ້ອມນີ້ ພຣະອົງບໍ່ມີເນື້ອກາຍທີ່ສາມາດຈັບຕ້ອງໄດ້. ສະນັ້ນພຣະເຈົ້າຈຶ່ງຕ້ອງນຳເອົາພາລະກິດດັ່ງກ່າວນີ້ມາສູ່ຄວາມສຳເລັດ ເຊິ່ງເປັນພາລະກິດທີ່ຈະເຮັດໃຫ້ມະນຸດທຸກຄົນໄດ້ຮູ້ຈັກຄວາມໝາຍຄວາມສຳຄັນຂອງພຣະເຈົ້າອົງແທ້ຈິງ. ເພື່ອບັນລຸຜົນສຳເລັດນີ້ ພຣະເຈົ້າຕ້ອງເປີດເຜີຍພຣະວິນຍານຂອງພຣະອົງໃຫ້ມວນມະນຸດໄດ້ສຳຜັດ ແລະ ປະຕິບັດພາລະກິດຂອງພຣະອົງໃນທ່າມກາງພວກເຂົາ. ນັ້ນໝາຍຄວາມວ່າ ເມື່ອພຣະວິນຍານຂອງພຣະເຈົ້າຮັບເອົາຮູບຮ່າງທີ່ເປັນຮູບປະທຳ, ໃສ່ເນື້ອໜັງ ແລະ ກະດູກ ແລະ ສາມາດຍ່າງໃນທ່າມກາງຜູ້ຄົນຢ່າງເປີດເຜີຍ, ຕິດຕາມພວກເຂົາໃນຊີວິດຂອງພວກເຂົາ, ບາງຄັ້ງປາກົດຕົວ ແລະ ບາງຄັ້ງລີບຊ້ອນພຣະອົງເອງ, ເມື່ອນັ້ນເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດເຂົ້າໃຈພຣະອົງຢ່າງເລິກເຊິ່ງ. ຖ້າພຣະເຈົ້າຍັງສະຖິດຢູ່ໃນເນື້ອໜັງເທົ່ານັ້ນ, ພຣະອົງຈະບໍ່ສາມາດສຳເລັດພາລະກິດທັງໝົດຂອງພຣະອົງໄດ້. ຫລັງຈາກປະຕິບັດພາລະກິດຂອງພຣະອົງໃນເນື້ອໜັງໃນໄລຍະໜຶ່ງ ແລະ ໄດ້ສຳເລັດພັນທະກິດທີ່ຈຳເປັນຕ້ອງກະທຳໃຫ້ສຳເລັດໃນເນື້ອໜັງ, ພຣະອົງກໍຈະອອກຈາກເນື້ອໜັງ ແລະ ເຮັດພາລະກິດໃນໂລກວິນຍານໃນຮູບລັກຂອງເນື້ອໜັງ ຄືດັ່ງພຣະເຢຊູໄດ້ກະທຳຫຼັງຈາກທີ່ພຣະອົງໄດ້ເຮັດພາລະກິດໃນໄລຍະໜຶ່ງໃນຄວາມເປັນມະນຸດທຳມະດາ ແລະ ສຳເລັດພາລະກິດທັງໝົດທີ່ພຣະອົງຈຳເປັນຕ້ອງເຮັດໃຫ້ສຳເລັດ. ພວກເຈົ້າອາດຈື່ບົດຄວາມນີ້ຈາກ "ເສັ້ນທາງ... (5)" ທີ່ວ່າ: "ເຮົາຈື່ພຣະບິດາຂອງເຮົາກ່າວຕໍ່ເຮົາວ່າ 'ເທິງແຜ່ນດິນໂລກ, ໃຫ້ສະແຫວງຫາເພື່ອປະຕິບັດຄວາມປະສົງຂອງພຣະບິດາຂອງເຈົ້າເທົ່ານັ້ນ ແລະ ເຮັດໃຫ້ການຝາກຝັງຂອງພຣະອົງສຳເລັດ. ບໍ່ມີສິ່ງໃດອີກທີ່ກ່ຽວຂ້ອງກັບເຈົ້າ'". ເຈົ້າເຫັນຫຍັງແດ່ໃນບົດຄວາມນີ້? ເມື່ອພຣະເຈົ້າລົງມາເທິງແຜ່ນດິນໂລກ, ພຣະອົງປະຕິບັດພາລະກິດຂອງພຣະອົງພາຍໃນຄວາມເປັນພຣະເຈົ້າເທົ່ານັ້ນ ເຊິ່ງແມ່ນສິ່ງທີ່ພຣະວິນຍານແຫ່ງສະຫວັນໄດ້ມອບໝາຍໃຫ້ກັບພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດ. ເມື່ອພຣະອົງລົງມາ, ພຣະອົງເວົ້າຢູ່ທົ່ວທຸກແຫ່ງຫົນເທົ່ານັ້ນ ເພື່ອກ່າວພຣະຄຳຂອງພຣະອົງດ້ວຍວິທີການຕ່າງໆ

ແລະ ຈາກຫຼາກຫຼາຍມຸມມອງ. ຫຼັກໆແລ້ວພຣະອົງຖືເອົາການສະໜອງໃຫ້ແກ່ມະນຸດ ແລະ ການສິດສອນມະນຸດເປັນເປົ້າໝາຍ ແລະ ຫຼັກການຂອງພາລະກິດຂອງພຣະອົງ ແລະ ພຣະອົງບໍ່ໄປພົວພັນກັບສິ່ງດັ່ງກ່າວເຊັ່ນຄວາມສຳພັນລະຫວ່າງຄົນ ຫຼື ລາຍລະອຽດຂອງຊີວິດຂອງຜູ້ຄົນ. ພັນທະກິດຫຼັກຂອງພຣະອົງແມ່ນການກ່າວແທນພຣະວິນຍານ. ນັ້ນກໍຄືເມື່ອພຣະວິນຍານຂອງພຣະເຈົ້າປະກົດໃນເນື້ອໜັງທີ່ຈັບຕ້ອງໄດ້, ພຣະອົງແມ່ນພຽງສະໜອງໃຫ້ແກ່ຊີວິດມະນຸດ ແລະ ເປີດເຜີຍຄວາມຈິງ. ພຣະອົງບໍ່ພົວພັນກັບວຽກງານຂອງມະນຸດ ເຊິ່ງກໍຄື ພຣະອົງບໍ່ມີສ່ວນໃນວຽກງານຂອງມະນຸດ. ມະນຸດບໍ່ສາມາດປະຕິບັດພາລະກິດສັກສິດໄດ້ ແລະ ພຣະເຈົ້າຈະບໍ່ພົວພັນໃນວຽກງານຂອງມະນຸດ. ຕະຫຼອດຫຼາຍປີທີ່ຜ່ານມາ ນັບຕັ້ງແຕ່ພຣະເຈົ້າໄດ້ມາສູ່ໂລກນີ້ ເພື່ອປະຕິບັດພາລະກິດຂອງພຣະອົງ, ພຣະອົງໄດ້ກະທຳພາລະກິດຜ່ານຜູ້ຄົນຕະຫຼອດມາ. ແນວໃດກໍ່ຕາມ ແຕ່ບໍ່ສາມາດຖືວ່າ ຜູ້ຄົນເຫຼົ່ານີ້ເປັນພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດ. ພວກເຂົາເປັນພຽງຜູ້ຄົນທີ່ພຣະເຈົ້ານຳໃຊ້ເທົ່ານັ້ນ. ໃນຂະນະດຽວກັນ, ພຣະເຈົ້າໃນປັດຈຸບັນສາມາດກ່າວຈາກມຸມມອງຂອງຄວາມເປັນພຣະເຈົ້າໂດຍກົງໄດ້ ໂດຍສົ່ງສຽງຂອງພຣະວິນຍານອອກ ແລະ ເຮັດພາລະກິດແທນພຣະວິນຍານ. ໃນທຳນອງດຽວກັນ, ທຸກຄົນທີ່ພຣະເຈົ້ານຳໃຊ້ໃນຫຼາຍຍຸກຫຼາຍສະໄໝຜ່ານມາແມ່ນຕົວຢ່າງຂອງການເຮັດພາລະກິດຂອງພຣະວິນຍານຂອງພຣະເຈົ້າໃນຮ່າງກາຍທີ່ເປັນເນື້ອໜັງ ແລ້ວເປັນຫຍັງຈຶ່ງບໍ່ສາມາດເອີ້ນພວກເຂົາວ່າເປັນພຣະເຈົ້າໄດ້? ແຕ່ພຣະເຈົ້າໃນທຸກມື້ນີ້ຍັງແມ່ນພຣະວິນຍານຂອງພຣະເຈົ້າທີ່ກະທຳພາລະກິດໃນເນື້ອໜັງໂດຍກົງ ແລະ ພຣະເຢຊູກໍແມ່ນພຣະວິນຍານຂອງພຣະເຈົ້າທີ່ປະຕິບັດພາລະກິດໃນເນື້ອໜັງເຊັ່ນດຽວກັນ; ທັງສອງແມ່ນເອີ້ນວ່າພຣະເຈົ້າ. ແລ້ວແມ່ນຫຍັງຄືຄວາມແຕກຕ່າງ? ຜູ້ຄົນທີ່ພຣະເຈົ້າໃຊ້ໃນຫຼາຍຍຸກຫຼາຍສະໄໝແມ່ນລ້ວນແລ້ວແຕ່ສາມາດສະແດງແນວຄິດ ແລະ ເຫດຜົນຢ່າງປົກກະຕິ. ພວກເຂົາລ້ວນເຂົ້າໃຈເຖິງຫຼັກການໃນການປະພຶດຂອງມະນຸດ. ພວກເຂົາມີແນວຄິດປົກກະຕິແບບມະນຸດ ແລະ ມີທຸກສິ່ງທີ່ຜູ້ຄົນປົກກະຕິຄວນມີ. ສ່ວນໃຫຍ່ພວກເຂົາມີຄວາມສາມາດພິເສດ ແລະ ສະຕິປັນຍາມາແຕ່ເກີດ. ໃນການກະທຳພາລະກິດຕໍ່ຜູ້ຄົນເຫຼົ່ານີ້ ພຣະວິນຍານຂອງພຣະເຈົ້າໄດ້ນຳໃຊ້ພອນສະຫວັນຂອງພວກເຂົາ ເຊິ່ງເປັນພອນສະຫວັນທີ່ພຣະເຈົ້າປະທານໃຫ້ພວກເຂົາຢູ່ແລ້ວ. ພຣະວິນຍານຂອງພຣະເຈົ້ານຳໃຊ້ພອນສະຫວັນຂອງພວກເຂົາ ໂດຍໃຊ້ຈຸດແຂງຂອງພວກເຂົາໃນການຮັບໃຊ້ພຣະເຈົ້າ. ແຕ່ເຖິງຢ່າງນັ້ນກໍຕາມ, ແກ່ນແທ້ຂອງພຣະເຈົ້າແມ່ນປາສະຈາກແນວຄິດ ຫຼື ຄວາມຄິດ, ປາສະຈາກເຈດຕະນາຂອງມະນຸດ ແລະ ແມ່ນແຕ່ຂາດສິ່ງທີ່ມະນຸດທຳມະດາມີ. ນັ້ນໝາຍຄວາມວ່າ ພຣະອົງບໍ່ມີຄວາມຮູ້ທາງດ້ານຫຼັກການກ່ຽວກັບການປະພຶດຂອງມະນຸດ. ມັນເປັນແນວນີ້ເມື່ອພຣະເຈົ້າໃນປັດຈຸບັນມາສູ່ແຜ່ນດິນໂລກ. ພາລະກິດຂອງພຣະອົງ ແລະ ພຣະທຳຂອງພຣະອົງແມ່ນບໍ່ໄດ້ປົນກັບເຈດຕະນາ ຫຼື ຄວາມຄິດຂອງມະນຸດ ແຕ່ສິ່ງເຫຼົ່ານັ້ນແມ່ນການສະແດງອອກໂດຍກົງເຖິງເຈດຕະນາຂອງພຣະວິນຍານ ແລະ ພຣະອົງເຮັດພາລະກິດໃນນາມຂອງພຣະເຈົ້າໂດຍກົງ. ນີ້ໝາຍຄວາມວ່າ ພຣະວິນຍານເວົ້າໂດຍກົງ ເຊິ່ງກໍຄື ຄວາມເປັນພຣະເຈົ້າເຮັດພາລະກິດໂດຍກົງໂດຍບໍ່ໄດ້ໄປປົນກັບເຈດຕະນາຂອງມະນຸດແມ່ນແຕ່ໜ້ອຍ. ເວົ້າອີກແບບໜຶ່ງກໍຄື ພຣະເຈົ້າຜູ້ບັງເກີດເປັນມະນຸດແມ່ນສະແດງໃຫ້ເຫັນເຖິງຄວາມເປັນ

ພຣະເຈົ້າໂດຍກົງ ໂດຍປາສະຈາກຄວາມຄິດ ແລະ ແນວຄິດຂອງມະນຸດ ແລະ ບໍ່ມີຄວາມເຂົ້າໃຈໃນຫຼັກການຂອງການປະພຶດຂອງມະນຸດ. ຖ້າມີພຽງແຕ່ຄວາມເປັນພຣະເຈົ້າປະຕິບັດພາລະກິດ (ໝາຍຄວາມວ່າ ຖ້າມີພຽງພຣະເຈົ້າເອງປະຕິບັດພາລະກິດ) ກໍຈະບໍ່ມີທາງທີ່ພາລະກິດຂອງພຣະເຈົ້າຈະຖືກປະຕິບັດຢູ່ເທິງແຜ່ນດິນໂລກ. ສະນັ້ນ ເມື່ອພຣະເຈົ້າມາສູ່ແຜ່ນດິນໂລກ ພຣະອົງຕ້ອງໄດ້ມີກຸ່ມຄົນຈຳນວນໜ້ອຍໜຶ່ງທີ່ພຣະອົງນຳໃຊ້ເພື່ອເຮັດພາລະກິດພາຍໃນມະນຸດຊາດ ຮ່ວມກັບພາລະກິດທີ່ພຣະເຈົ້າກະທຳໃນຄວາມເປັນພຣະເຈົ້າ. ເວົ້າອີກຢ່າງໜຶ່ງກໍຄື ພຣະອົງໃຊ້ວຽກງານຂອງມະນຸດເພື່ອສະໜັບສະໜູນພາລະກິດສັກສິດຂອງພຣະອົງ. ບໍ່ດັ່ງນັ້ນກໍຈະບໍ່ມີທາງທີ່ມະນຸດຈະສາມາດພົວພັນກັບພາລະກິດທີ່ສັກສິດໄດ້ໂດຍກົງ. ມັນເປັນແນວນີ້ສຳລັບພຣະເຢຊູ ແລະ ອັກຄະສາວົກທັງຫຼາຍຂອງພຣະອົງ. ໃນສະໄໝທີ່ພຣະອົງຢູ່ໃນໂລກ, ພຣະເຢຊູໄດ້ລົບລ້າງພຣະບັນຍັດເກົ່າ ແລະ ສ້າງພຣະບັນຍັດໃໝ່. ພ້ອມນີ້ພຣະອົງໄດ້ກ່າວພຣະທຳໄວ້ຫຼາຍຂໍ້. ພາລະກິດທັງໝົດນີ້ແມ່ນກະທຳໃນຄວາມເປັນພຣະເຈົ້າ. ສ່ວນບຸກຄົນອື່ນເຊັ່ນ: ເປໂຕ, ໂປໂລ ແລະ ໂຢຮັນ ລ້ວນແລ້ວແຕ່ອີງພາລະກິດທີ່ເກີດຂຶ້ນພາຍຫຼັງຂອງພວກເຂົາໃສ່ພື້ນຖານພຣະທຳຂອງພຣະເຢຊູ. ນັ້ນກໍຄື ພຣະເຈົ້າໄດ້ລິເລີ່ມພາລະກິດຂອງພຣະອົງໃນຍຸກນັ້ນ ເຊິ່ງເປັນການນຳໄປສູ່ການເລີ່ມຕົ້ນຂອງຍຸກແຫ່ງພຣະຄຸນ; ນັ້ນກໍຄື ພຣະອົງໄດ້ນຳມາຍຸກໃໝ່, ລົບລ້າງຍຸກເກົ່າ ພ້ອມທັງໄດ້ສຳເລັດຂໍ້ພຣະທຳທີ່ວ່າ "ພຣະເຈົ້າແມ່ນການເລີ່ມຕົ້ນ ແລະ ການສິ້ນສຸດ". ເວົ້າອີກແບບໜຶ່ງກໍຄື ມະນຸດຕ້ອງເຮັດວຽກງານຂອງມະນຸດບົນພື້ນຖານຂອງພາລະກິດທີ່ສັກສິດ. ຫລັງຈາກທີ່ພຣະເຢຊູໄດ້ກ່າວໃນສິ່ງທີ່ພຣະອົງຕ້ອງການກ່າວ ແລະ ໄດ້ສຳເລັດພາລະກິດຂອງພຣະອົງເທິງແຜ່ນດິນໂລກ, ພຣະອົງກໍຈາກມະນຸດໄປ. ຫລັງຈາກນີ້ ທຸກຄົນທີ່ກຳລັງກະທຳພາລະກິດ ກໍເຮັດຕາມຫຼັກການທີ່ໄດ້ສະແດງອອກໃນພຣະທຳຂອງພຣະອົງ ແລະ ປະຕິບັດຕາມຄວາມຈິງທີ່ພຣະອົງໄດ້ກ່າວໄວ້. ຜູ້ຄົນທັງໝົດເຫຼົ່ານີ້ແມ່ນກະທຳພາລະກິດເພື່ອພຣະເຢຊູ. ຖ້າຫາກມີແຕ່ພຣະເຢຊູກະທຳພາລະກິດພຽງແຕ່ພຣະອົງເທົ່ານັ້ນ, ບໍ່ວ່າພຣະອົງຈະກ່າວພຣະທຳຫຼາຍພຽງໃດ ຜູ້ຄົນກໍຈະບໍ່ທີທາງເຂົ້າຮ່ວມກັບພຣະທຳຂອງພຣະອົງໄດ້ ເພາະວ່າ ພຣະອົງກະທຳພາລະກິດໃນຄວາມເປັນພຣະເຈົ້າ ແລະ ສາມາດພຽງແຕ່ກ່າວພຣະທຳໃນຄວາມເປັນພຣະເຈົ້າເທົ່ານັ້ນ ແລະ ພຣະອົງບໍ່ສາມາດອະທິບາຍເຖິງສິ່ງຕ່າງໆເຖິງຈຸດທີ່ຜູ້ຄົນທົ່ວໄປສາມາດເຂົ້າໃຈພຣະທຳຂອງພຣະອົງໄດ້. ສະນັ້ນ ພຣະອົງຈຳເປັນຕ້ອງໄດ້ມີອັກຄະສາວົກ ແລະ ສາສະດາ ທີ່ມານຳຫລັງພຣະອົງເພື່ອຊ່ວຍພາລະກິດຂອງພຣະອົງ. ນີ້ແມ່ນຫຼັກການພຣະເຈົ້າຜູ້ບັງເກີດເປັນມະນຸດເຮັດພາລະກິດຂອງພຣະອົງ ເຊິ່ງນຳໃຊ້ເນື້ອໜັງທີ່ບັງເກີດເປັນມະນຸດເພື່ອກ່າວ ແລະ ເຮັດພາລະກິດ ເພື່ອໃຫ້ສຳເລັດພາລະກິດຂອງຄວາມເປັນພຣະເຈົ້າ ແລະ ຫຼັງຈາກນັ້ນກໍໄດ້ນຳໃຊ້ຜູ້ຄົນສາມສີ່ຄົນ ຫຼື ອາດຫຼາຍກວ່ານັ້ນ ທີ່ສະແຫວງຫາໃຈຂອງພຣະເຈົ້າ ເພື່ອຊ່ວຍເຫຼືອພາລະກິດຂອງພຣະອົງ. ໝາຍຄວາມວ່າ ພຣະເຈົ້ານຳໃຊ້ຜູ້ຄົນທີ່ສະແຫວງຫາໃຈຂອງພຣະອົງ ເພື່ອກະທຳພາລະກິດໃນການຊີ້ນຳ ແລະ ລ້ຽງດູມະນຸດຊາດ ເພື່ອວ່າຄົນທີ່ພຣະເຈົ້າເລືອກອາດເຂົ້າສູ່ຄວາມເປັນຈິງແຫ່ງຄວາມຈິງ.

ເມື່ອພຣະເຈົ້າມາສູ່ເນື້ອໜັງ, ຖ້າພຣະອົງພຽງແຕ່ກະທຳພາລະກິດຂອງຄວາມເປັນພຣະເຈົ້າເທົ່ານັ້ນ ໂດຍທີ່ບໍ່ມີຜູ້ຄົນສະແຫວງຫາໃຈຂອງພຣະອົງ ເພື່ອປະຕິບັດພາລະກິດຮ່ວມກັບພຣະອົງ,

ມະນຸດກໍຈະບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າ ຫຼື ພົວພັນກັບພຣະອົງໄດ້. ພຣະເຈົ້າຕ້ອງໃຊ້ຜູ້ຄົນທຳມະດາທີ່ສະແຫວງຫາໃຈຂອງພຣະອົງ ເພື່ອສຳເລັດພາລະກິດນີ້, ເພື່ອເບິ່ງແຍງ ແລະ ຊີ້ນຳຄຣິດຕະຈັກ ເພື່ອລະດັບຂະບວນການຮັບຮູ້ຂອງມະນຸດ ກໍຄືສະໝອງຂອງເຂົາສາມາດປະມວນນັ້ນຈະສາມາດຈິນຕະນາການໄດ້ສຳເລັດ. ເວົ້າອີກແບບໜຶ່ງກໍຄື ພຣະເຈົ້ານຳໃຊ້ຜູ້ຄົນຈຳນວນໜຶ່ງທີ່ສະແຫວງຫາໃຈຂອງພຣະອົງເພື່ອ "ແປຄວາມໝາຍ" ພາລະກິດທີ່ພຣະອົງກະທຳໃນຄວາມເປັນພຣະເຈົ້າຂອງພຣະອົງ ເພື່ອໃຫ້ພາລະກິດດັ່ງກ່າວໄດ້ຖືກເປີດເຜີຍອອກ ເຊິ່ງນັ້ນກໍຄື ເພື່ອປ່ຽນພາສາສັກສິດເປັນພາສາມະນຸດ ເພື່ອວ່າ ຜູ້ຄົນຈະສາມາດຢັ່ງຮູ້ ແລະ ເຂົ້າໃຈພາລະກິດນັ້ນໄດ້. ຖ້າພຣະເຈົ້າບໍ່ໄດ້ກະທຳດັ່ງນັ້ນ ກໍຈະບໍ່ມີໃຜເຂົ້າໃຈພາສາສັກສິດຂອງພຣະເຈົ້າໄດ້ ຍ້ອນວ່າ ບໍ່ວ່າຢ່າງໃດກໍຕາມຜູ້ຄົນທີ່ສະແຫວງຫາໃຈຂອງພຣະເຈົ້ານັ້ນ ແມ່ນເປັນຄົນກຸ່ມນ້ອຍ ແລະ ຍ້ອນວ່າ ຄວາມສາມາດໃນການເຂົ້າໃຈຂອງມະນຸດແມ່ນຕໍ່າຫຼາຍ. ນັ້ນແມ່ນເຫດຜົນທີ່ພຣະເຈົ້າເລືອກໃຊ້ວິທີນີ້ເທົ່ານັ້ນ ໃນເວລາກະທຳພາລະກິດໃນເນື້ອໜັງທີ່ເກີດເປັນມະນຸດ. ຖ້າມີແຕ່ພາລະກິດສັກສິດເທົ່ານັ້ນ ມະນຸດຈະບໍ່ມີທາງຮູ້ ຫຼື ພົວພັນກັບພຣະເຈົ້າໄດ້ ຍ້ອນວ່າ ມະນຸດບໍ່ເຂົ້າໃຈພາສາຂອງພຣະເຈົ້າ. ມະນຸດສາມາດເຂົ້າໃຈພາສານີ້ໄດ້ຜ່ານຕົວແທນຂອງຜູ້ຄົນທີ່ສະແຫວງຫາໃຈຂອງພຣະເຈົ້າເທົ່ານັ້ນ ເຊິ່ງເປັນຜູ້ທີ່ອະທິບາຍພຣະທຳຂອງພຣະອົງໃຫ້ແຈ່ມແຈ້ງຂຶ້ນ. ເຖິງຢ່າງໃດກໍຕາມ, ຖ້າມີແຕ່ຜູ້ຄົນດັ່ງກ່າວທີ່ປະຕິບັດພາລະກິດພາຍໃນມະນຸດຊາດ, ນັ້ນກໍພຽງແຕ່ສາມາດຮັກສາຊີວິດປົກກະຕິຂອງມະນຸດເທົ່ານັ້ນ ແຕ່ບໍ່ສາມາດປ່ຽນແປງອຸປະນິໄສຂອງມະນຸດໄດ້. ພາລະກິດຂອງພຣະເຈົ້າຈະບໍ່ສາມາດມີຈຸດເລີ່ມຕົ້ນໃໝ່ໄດ້; ຈະມີແຕ່ເພງເກົ່າ ແລະ ຄຳເວົ້າເກົ່າຊໍ້າຊາກ. ມີແຕ່ຜ່ານຕົວແທນຂອງພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນທີ່ກ່າວທຸກສິ່ງທີ່ຈຳເປັນຕ້ອງກ່າວ ແລະ ກະທຳທຸກສິ່ງທີ່ຈຳເປັນຕ້ອງກະທຳໃນຊ່ວງເວລາຂອງການບັງເກີດເປັນມະນຸດຂອງພຣະອົງ ຫລັງຈາກທີ່ຜູ້ຄົນປະຕິບັດ ແລະ ປະສົບກັບພາລະກິດຕາມພຣະທຳຂອງພຣະອົງ ເຊິ່ງດ້ວຍເຫດນັ້ນເທົ່ານັ້ນ ອຸປະນິໄສທາງຊີວິດຂອງພວກເຂົາຈຶ່ງຈະສາມາດປ່ຽນໄດ້ ແລະດ້ວຍເຫດນັ້ນເທົ່ານັ້ນ ພວກເຂົາຈຶ່ງຈະສາມາດດຳລົງຊີວິດໄປກັບການເວລາໄດ້. ພຣະອົງທີ່ກະທຳພາລະກິດພາຍໃນຄວາມເປັນພຣະເຈົ້າແມ່ນຕົວແທນພຣະເຈົ້າ ໃນຂະນະທີ່ຜູ້ທີ່ກະທຳພາລະກິດພາຍໃນຄວາມເປັນມະນຸດແມ່ນຜູ້ຄົນທີ່ພຣະເຈົ້ານຳໃຊ້. ນັ້ນໝາຍຄວາມວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນແຕກຕ່າງຈາກຜູ້ຄົນທີ່ພຣະເຈົ້ານຳໃຊ້ຢ່າງຊັດເຈນ. ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນສາມາດກະທຳພາລະກິດຂອງຄວາມເປັນພຣະເຈົ້າ ໃນຂະນະທີ່ຜູ້ຄົນທີ່ພຣະເຈົ້າໃຊ້ແມ່ນບໍ່ສາມາດເຮັດໄດ້. ໃນເບື້ອງຕົ້ນຂອງແຕ່ລະຍຸກນັ້ນ ພຣະວິນຍານຂອງພຣະເຈົ້າກ່າວດ້ວຍຕົວເອງ ແລະ ເປີດຍຸກໃໝ່ເພື່ອນຳມະນຸດເຂົ້າສູ່ການເລີ່ມຕົ້ນໃໝ່. ເມື່ອພຣະອົງໄດ້ກ່າວສິ້ນສຸດລົງ, ນີ້ສະແດງວ່າ ພາລະກິດຂອງພຣະເຈົ້າພາຍໃນຄວາມເປັນພຣະເຈົ້າຂອງພຣະອົງແມ່ນສຳເລັດລົງ. ຫລັງຈາກນັ້ນ ທຸກຄົນກໍເດີນຕາມການນຳພາຂອງຜູ້ທີ່ພຣະເຈົ້າໃຊ້ເພື່ອເຂົ້າສູ່ປະສົບການຊີວິດຂອງພວກເຂົາ. ໃນກໍລະນີດຽວກັນ ກໍເປັນຂັ້ນຕອນທີ່ພຣະເຈົ້ານຳມະນຸດເຂົ້າສູ່ຍຸກໃໝ່ ແລະ ມອບຈຸດເລີ່ມຕົ້ນໃໝ່ໃຫ້ກັບຜູ້ຄົນ ເຊິ່ງເປັນເວລາທີ່ພາລະກິດຂອງພຣະເຈົ້າໃນເນື້ອໜັງສິ້ນສຸດລົງ.

ພຣະເຈົ້າບໍ່ໄດ້ມາສູ່ແຜ່ນດິນໂລກ ເພື່ອເຮັດໃຫ້ຄວາມເປັນມະນຸດທຳມະດາຂອງພຣະອົງສົມບູນ ແລະ ບໍ່ໄດ້ມາເພື່ອກະທຳພາລະກິດຂອງຄວາມເປັນມະນຸດທຳມະດາ. ພຣະອົງມາເພື່ອກະທຳພາລະກິດຂອງຄວາມເປັນພຣະເຈົ້າໃນຄວາມເປັນມະນຸດທຳມະດາເທົ່ານັ້ນ. ສິ່ງທີ່ພຣະເຈົ້າກ່າວເຖິງກ່ຽວກັບຄວາມເປັນມະນຸດຊາດທຳມະດາບໍ່ແມ່ນຄືສິ່ງທີ່ມະນຸດວາດພາບເອົາໄວ້. ມະນຸດນິຍາມ "ຄວາມເປັນມະນຸດທຳມະດາ" ວ່າເປັນການມີເມຍ ຫຼື ຜົວ, ມີລູກຊາຍ ແລະ ລູກສາວ ເຊິ່ງເປັນສິ່ງພິສູດວ່າ ຄົນເຮົາແມ່ນຄົນປົກກະຕິ; ແຕ່ຢ່າງໃດກໍຕາມ, ພຣະເຈົ້າບໍ່ເຫັນຄວາມເປັນມະນຸດທຳມະດາໃນທຳນອງນັ້ນ. ພຣະອົງເຫັນຄວາມເປັນມະນຸດທຳມະດາວ່າ ເປັນການມີຄວາມຄິດແບບມະນຸດທຳມະດາ, ມີຊີວິດແບບມະນຸດທຳມະດາ ແລະ ເກີດເປັນຄົນທຳມະດາ. ແຕ່ຄວາມທຳມະດາຂອງພຣະອົງບໍ່ໄດ້ລວມເຖິງການມີເມຍ ຫຼື ຜົວ ແລະ ລູກ ຄືດັ່ງມະນຸດເວົ້າກັນກ່ຽວກັບຄວາມທຳມະດາ. ສຳລັບມະນຸດແລ້ວ ການເປັນມະນຸດທຳມະດາທີ່ພຣະເຈົ້າກ່າວເຖິງ ແມ່ນສິ່ງທີ່ມະນຸດຈະຖືວ່າ ການຂາດຄວາມເປັນມະນຸດໂດຍທີ່ເກືອບຂາດອາລົມ ແລະ ເບິ່ງຄືວ່າ ຂາດຄວາມຕ້ອງການທາງດ້ານເນື້ອໜັງຄືດັ່ງພຣະເຢຊູ ທີ່ມີຮູບລັກພາຍນອກຂອງຄົນທຳມະດາ ແລະ ມີລັກສະນະຂອງຄົນທຳມະດາເທົ່ານັ້ນ ແຕ່ໃນແກ່ນແທ້ແລ້ວແມ່ນບໍ່ໄດ້ມີທຸກສິ່ງທີ່ຄົນທຳມະດາຄວນມີ. ຈາກສິ່ງນີ້ແມ່ນສາມາດເຫັນໄດ້ວ່າ ແກ່ນແທ້ຂອງພຣະເຈົ້າຜູ້ບັງເກີດເປັນມະນຸດບໍ່ໄດ້ມີຄວາມເປັນມະນຸດທຳມະດາທັງໝົດ ແຕ່ມີພຽງບາງສ່ວນໃນສິ່ງທີ່ຜູ້ຄົນຄວນມີ ເພື່ອສະໜັບສະໜູນວຽກປະຈຳຂອງຊີວິດມະນຸດທຳມະດາ ແລະ ຮັກສາພະລັງແຫ່ງເຫດຜົນຂອງມະນຸດທຳມະດາເທົ່ານັ້ນ. ແຕ່ວ່າສິ່ງເຫຼົ່ານີ້ບໍ່ກ່ຽວຂ້ອງກັບສິ່ງທີ່ມະນຸດຖືວ່າ ຄວາມເປັນມະນຸດທຳມະດາ. ສິ່ງເຫຼົ່ານັ້ນຄືສິ່ງທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດຄວນມີ. ເຖິງຢ່າງໃດກໍຕາມ, ຍັງມີຜູ້ຄົນທີ່ຢືນຢັນເຊິ່ງສາມາດເວົ້າໄດ້ວ່າ ພຣະເຈົ້າຜູ້ບັງເກີດເປັນມະນຸດແມ່ນມີຄວາມເປັນມະນຸດທຳມະດາ ຖ້າພຣະອົງມີເມຍ, ລູກຊາຍ ແລະ ລູກສາວ ເຊິ່ງກໍຄືຄອບຄົວເທົ່ານັ້ນ; ພວກເຂົາເວົ້າວ່າ ຖ້າບໍ່ມີສິ່ງນີ້ ພຣະອົງກໍບໍ່ແມ່ນ ຄົນທຳມະດາ. ຊັ້ນເຮົາຂໍຖາມເຈົ້າດັ່ງນີ້ວ່າ "ພຣະເຈົ້າມີເມຍບໍ? ເປັນໄປໄດ້ບໍທີ່ພຣະເຈົ້າຈະມີຜົວ? ພຣະເຈົ້າສາມາດມີລູກໄດ້ບໍ?" ສິ່ງເຫຼົ່ານີ້ບໍ່ແມ່ນຄວາມເຊື່ອທີ່ຜິດບໍ? ເຖິງຢ່າງໃດກໍຕາມ, ພຣະເຈົ້າຜູ້ບັງເກີດເປັນມະນຸດກໍບໍ່ສາມາດເກີດຈາກຮອຍແຕກລະຫວ່າງຫີນໄດ້ ຫຼື ຫຼົ່ນລົງມາແຕ່ເທິງຟ້າ. ພຣະອົງສາມາດບັງເກີດເຂົ້າໃນຄອບຄົວມະນຸດທຳມະດາເທົ່ານັ້ນ. ນັ້ນແມ່ນເຫດຜົນທີ່ວ່າພຣະອົງຈຶ່ງມີພໍ່ແມ່, ເອື້ອຍ ແລະ ນ້ອງສາວ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຄວາມເປັນມະນຸດທຳມະດາຂອງພຣະເຈົ້າຜູ້ບັງເກີດເປັນມະນຸດຄວນມີ. ເຊັ່ນດຽວກັບກໍລະນີຂອງພຣະເຢຊູ; ພຣະເຢຊູມີພໍ່ ແລະ ແມ່, ອ້າຍ, ເອື້ອຍ ແລະ ນ້ອງ ແລະ ທັງໝົດນີ້ແມ່ນປົກກະຕິ. ແຕ່ຖ້າພຣະອົງມີເມຍ, ລູກຊາຍ ແລະ ລູກສາວ, ພຣະອົງຈະບໍ່ແມ່ນມະນຸດທຳມະດາ ທີ່ພຣະເຈົ້າຕັ້ງໃຈໃຫ້ພຣະເຈົ້າຜູ້ບັງເກີດເປັນມະນຸດມີ. ຖ້າເປັນດັ່ງນີ້ ພຣະອົງຈະບໍ່ສາມາດກະທຳພາລະກິດໃນນາມພຣະເຈົ້າໄດ້. ຍ້ອນພຣະອົງບໍ່ມີເມຍ ຫຼື ລູກ ແຕ່ກໍເກີດຈາກຜູ້ຄົນທຳມະດາໃນຄອບຄົວທຳມະດາ, ພຣະອົງຈຶ່ງສາມາດປະຕິບັດພາລະກິດຂອງພຣະເຈົ້າໄດ້. ເວົ້າໃຫ້ຈະແຈ້ງກວ່ານີ້ກໍຄື ສິ່ງທີ່ພຣະເຈົ້າຖືວ່າ ເປັນຄົນທຳມະດາແມ່ນຄົນທີ່ເກີດຢູ່ໃນຄອບຄົວທຳມະດາ. ມີພຽງແຕ່ບຸກຄົນແບບນີ້ເທົ່ານັ້ນທີ່ມີຄຸນສົມບັດເຮັດພາລະກິດສັກສິດໄດ້. ໃນ

ທາງກົງກັນຂ້າມ ຖ້າຫາກວ່າບຸກຄົນນັ້ນມີເມຍ, ລູກ ຫຼື ຜົວ, ຄົນນັ້ນຈະບໍ່ສາມາດເຮັດພາລະກິດສັກສິດໄດ້ ເພາະວ່າພວກເຂົາຈະມີພຽງແຕ່ຄວາມເປັນມະນຸດທຳມະດາທີ່ມະນຸດຕ້ອງການ ແຕ່ບໍ່ແມ່ນຄວາມເປັນມະນຸດທຳມະດາທີ່ພຣະເຈົ້າຕ້ອງການ. ສິ່ງທີ່ພຣະເຈົ້າຄິດເອົາໄວ້ ແລະ ສິ່ງທີ່ຜູ້ຄົນເຂົ້າໃຈແມ່ນແຕກຕ່າງກັນຫຼາຍ. ໃນຂັ້ນຕອນພາລະກິດນີ້ຂອງພຣະເຈົ້າ ມີຫຼາຍສິ່ງທີ່ກົງກັນຂ້າມ ແລະ ແຕກຕ່າງຈາກແນວຄິດຂອງຄົນຫຼາຍ. ຄົນເຮົາສາມາດເວົ້າໄດ້ວ່າ ຂັ້ນຕອນພາລະກິດນີ້ຂອງພຣະເຈົ້າແມ່ນລ້ວນແລ້ວແຕ່ມີຄວາມເປັນພຣະເຈົ້າເຮັດພາລະກິດໂດຍກົງ ໂດຍທີ່ມີມະນຸດຮັບໜ້າທີ່ເປັນຜູ້ສະໜັບສະໜູນ. ເນື່ອງຈາກວ່າ ພຣະເຈົ້າມາສູ່ແຜ່ນດິນໂລກ ເພື່ອປະຕິບັດພາລະກິດຂອງພຣະອົງດ້ວຍພຣະອົງເອງ ແທນທີ່ຈະອະນຸຍາດໃຫ້ມະນຸດກະທຳແທນພຣະອົງ, ພຣະອົງຈຶ່ງບັງເກີດເປັນມະນຸດໃນເນື້ອໜັງ (ເປັນຄົນທຳມະດາທີ່ບໍ່ສົມບູນ) ເພື່ອເຮັດພາລະກິດຂອງພຣະອົງ. ພຣະອົງໃຊ້ການບັງເກີດເປັນມະນຸດນີ້ເພື່ອສະແດງຍຸກໃໝ່ກັບມະນຸດ, ເພື່ອບອກມະນຸດກ່ຽວກັບຂັ້ນຕໍ່ໄປຂອງພາລະກິດຂອງພຣະອົງ ແລະ ເພື່ອຂໍໃຫ້ຜູ້ຄົນປະຕິບັດຕາມເສັ້ນທາງທີ່ໄດ້ອະທິບາຍໄວ້ໃນພຣະທຳຂອງພຣະອົງ. ດ້ວຍເຫດນັ້ນ ພາລະກິດຂອງພຣະເຈົ້າໃນເນື້ອໜັງຈຶ່ງສຳເລັດ; ພຣະອົງກຳລັງຈະຈາກມະນຸດໄປ ໂດຍທີ່ຈະບໍ່ອາໄສຢູ່ໃນເນື້ອໜັງຂອງມະນຸດທຳມະດາອີກຕໍ່ໄປ, ແຕ່ຈະໜີຈາກມະນຸດໄປສືບຕໍ່ດຳເນີນພາລະກິດອີກສ່ວນໜຶ່ງຂອງພຣະອົງແທນ. ຫຼັງຈາກນັ້ນ ພຣະອົງຈະສືບຕໍ່ດຳເນີນພາລະກິດຂອງພຣະອົງເທິງແຜ່ນດິນໂລກໃນທ່າມກາງຄົນກຸ່ມນີ້ ແຕ່ຈະດຳເນີນຢູ່ໃນຄວາມເປັນມະນຸດຂອງພວກເຂົາ ໂດຍນຳໃຊ້ຜູ້ຄົນທີ່ສະແຫວງຫາໃຈຂອງພຣະອົງເອງ.

ພຣະເຈົ້າຜູ້ບັງເກີດເປັນມະນຸດບໍ່ສາມາດຢູ່ກັບມະນຸດຕະຫຼອດໄປໄດ້ ເນື່ອງຈາກວ່າ ພຣະເຈົ້າມີພາລະກິດອື່ນຢ່າງຫຼວງຫຼາຍທີ່ຕ້ອງກະທຳ. ພຣະອົງບໍ່ສາມາດຕິດພັນຢູ່ກັບເນື້ອໜັງ; ພຣະອົງຕ້ອງອອກຈາກເນື້ອໜັງເພື່ອກະທຳພາລະກິດທີ່ພຣະອົງຕ້ອງກະທຳ, ເຖິງແມ່ນວ່າ ພຣະອົງຈະກະທຳພາລະກິດໃນຮູບລັກຂອງເນື້ອໜັງກໍຕາມ. ເມື່ອພຣະເຈົ້າມາສູ່ແຜ່ນດິນໂລກ, ພຣະອົງບໍ່ໄດ້ລໍຖ້າຈົນກວ່າພຣະອົງຈະມີຮູບຮ່າງທີ່ຄົນທຳມະດາຄວນຈະໄດ້ຮັບກ່ອນຕາຍ ຫຼື ອອກຈາກການເປັນມະນຸດ. ບໍ່ວ່າເນື້ອໜັງຂອງພຣະອົງຈະໄດ້ຈັກປີກໍຕາມ ແຕ່ເມື່ອພາລະກິດຂອງພຣະອົງໄດ້ສຳເລັດ, ພຣະອົງກໍຈະໄປ ແລະ ອອກຈາກມະນຸດ. ພຣະອົງບໍ່ມີອາຍຸ, ພຣະອົງບໍ່ນັບວັນເວລາຂອງພຣະອົງຕາມອາຍຸໄຂຂອງມະນຸດ; ແຕ່ກົງກັນຂ້າມ ພຣະອົງຈົບຊີວິດຂອງພຣະອົງທີ່ສະຖິດໃນເນື້ອໜັງຕາມຂັ້ນຕອນຂອງພາລະກິດຂອງພຣະອົງ. ອາດຈະມີບາງຄົນຮູ້ສຶກວ່າ ໃນການມາສູ່ເນື້ອໜັງນັ້ນ ພຣະເຈົ້າຕ້ອງມີອາຍຸຮອດຂອບເຂດໃດໜຶ່ງ, ຕ້ອງເຕີບໃຫຍ່ເປັນຜູ້ໃຫຍ່, ມີອາຍຸເຖົ້າແກ່ ແລະ ຈາກໄປເມື່ອຮ່າງກາຍນັ້ນເຮັດພາລະກິດບໍ່ໄດ້ແລ້ວ. ນີ້ຄືຈິນຕະນາການຂອງມະນຸດ; ແຕ່ພຣະເຈົ້າບໍ່ໄດ້ດຳເນີນພາລະກິດແບບນັ້ນ. ພຣະອົງມາສູ່ເນື້ອໜັງເພື່ອກະທຳພາລະກິດທີ່ພຣະອົງຄວນກະທຳເທົ່ານັ້ນ ແລະ ບໍ່ແມ່ນມາເພື່ອໃຊ້ຊີວິດແບບມະນຸດທົ່ວໄປທີ່ເກີດຈາກພໍ່ແມ່, ເຕີບໃຫຍ່ ແລະ ສ້າງຄອບຄົວ ແລະ ເລີ່ມຕົ້ນອາຊີບ, ມີລູກ ແລະ ລ້ຽງລູກ ຫຼື ປະສົບກັບຄວາມສຸກທຸກຂອງຊີວິດ ເຊິ່ງລ້ວນແລ້ວແຕ່ເປັນກິດຈະກຳຂອງມະນຸດທົ່ວໄປ. ເມື່ອພຣະເຈົ້າມາສູ່ແຜ່ນດິນໂລກ, ນີ້ແມ່ນການສວມເນື້ອໜັງຂອງພຣະວິນຍານຂອງພຣະເຈົ້າ ເຊິ່ງກໍຄືການ

ມາສູ່ເນື້ອໜັງ ແຕ່ພຣະເຈົ້າບໍ່ໄດ້ໃຊ້ຊີວິດແບບຄົນທຳມະດາສາມັນ. ພຣະອົງມາເພື່ອສຳເລັດສ່ວນໜຶ່ງໃນແຜນການຄຸ້ມຄອງຂອງພຣະອົງເທົ່ານັ້ນ. ຫລັງຈາກນັ້ນ ພຣະອົງຈະຈາກມະນຸດໄປ. ເມື່ອພຣະອົງມາສູ່ເນື້ອໜັງ, ພຣະວິນຍານຂອງພຣະເຈົ້າບໍ່ໄດ້ເຮັດໃຫ້ຄວາມເປັນມະນຸດທຳມະດາຂອງເນື້ອໜັງກໍຈະບໍ່ສົມບູນ. ແຕ່ກົງກັນຂ້າມ ໃນເວລາທີ່ພຣະເຈົ້າໄດ້ກຳນົດໄວ້ລ່ວງໜ້າ, ຄວາມເປັນພຣະເຈົ້າກໍປະຕິບັດພາລະກິດໂດຍກົງ. ຫຼັງຈາກນັ້ນ, ຫລັງຈາກໄດ້ກະທຳທຸກສິ່ງທີ່ພຣະອົງຈຳເປັນຕ້ອງກະທຳ ແລະ ສຳເລັດພັນທະກິດຂອງພຣະອົງຢ່າງຄົບຖ້ວນ, ພາລະກິດຂອງພຣະວິນຍານຂອງພຣະເຈົ້າໃນຂັ້ນຕອນນີ້ກໍສຳເລັດລົງ ເຊິ່ງໃນຈຸດນັ້ນ ຊີວິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດກໍສິ້ນສຸດລົງເຊັ່ນກັນ ບໍ່ວ່າຮ່າງກາຍທີ່ເປັນເນື້ອໜັງຂອງພຣະອົງຈະມີຊີວິດຍືນຍາວ ຫຼື ບໍ່ກໍ່ຕາມ. ນັ້ນໝາຍຄວາມວ່າ ບໍ່ວ່າຮ່າງກາຍທີ່ເປັນເນື້ອໜັງຈະຣອດຂັ້ນຕອນຂອງຊີວິດໃດກໍຕາມ, ບໍ່ວ່າຮ່າງກາຍນັ້ນຈະມີຊີວິດຢູ່ແຜ່ນດິນໂລກດົນປານໃດກໍຕາມ, ທຸກສິ່ງແມ່ນຖືກຕັດສິນໂດຍພາລະກິດຂອງພຣະວິນຍານ. ມັນບໍ່ມີຫຍັງກ່ຽວຂ້ອງກັບສິ່ງທີ່ມະນຸດຖືວ່າ ເປັນຄວາມເປັນມະນຸດທຳມະດາ. ຍົກຕົວຢ່າງພຣະເຢຊູ. ພຣະອົງໄດ້ໃຊ້ຊີວິດໃນເນື້ອໜັງເປັນເວລາສາມສິບສາມປີເຄິ່ງ. ໃນດ້ານຂອງອາຍຸໄຂຂອງຮ່າງກາຍມະນຸດ, ພຣະອົງບໍ່ຄວນຈະຕາຍໃນໄວອາຍຸນັ້ນ ແລະ ພຣະອົງບໍ່ຄວນຈາກໄປເທື່ອ. ແຕ່ນີ້ບໍ່ແມ່ນສິ່ງທີ່ພຣະວິນຍານຂອງພຣະເຈົ້າຕ້ອງສົນໃຈ. ຫລັງຈາກພາລະກິດຂອງພຣະອົງສຳເລັດ ເຊິ່ງໃນຈຸດນັ້ນ ຮ່າງກາຍແມ່ນຖືກເອົາໄປແລ້ວ ໂດຍຫາຍໄປພ້ອມກັບພຣະວິນຍານ. ນີ້ຄືຫຼັກການທີ່ພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງ. ສະນັ້ນ, ເວົ້າໂດຍສະເພາະແລ້ວ ຄວາມເປັນມະນຸດຂອງພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນບໍ່ສຳຄັນຫຼາຍ. ເວົ້າອີກກໍຄື ພຣະອົງມາສູ່ແຜ່ນດິນໂລກບໍ່ແມ່ນເພື່ອໃຊ້ຊີວິດແບບມະນຸດທຳມະດາ. ພຣະອົງບໍ່ໄດ້ສ້າງຊີວິດຂອງມະນຸດທຳມະດາກ່ອນ ແລ້ວຫລັງຈາກນັ້ນເລີ່ມປະຕິບັດພາລະກິດ. ແຕ່ກົງກັນຂ້າມຕາບເທົ່າທີ່ພຣະອົງບັງເກີດເຂົ້າໃນຄອບຄົວມະນຸດທຳມະດາ ພຣະອົງກໍຈະສາມາດກະທຳພາລະກິດສັກສິດໄດ້ ເຊິ່ງເປັນພາລະກິດທີ່ບໍ່ມີມົນທິນຈາກເຈດຕະນາຂອງມະນຸດ, ທີ່ບໍ່ເປັນເນື້ອໜັງ, ບໍ່ໃຊ້ແນວທາງຂອງສັງຄົມ ຫຼື ກ່ຽວຂ້ອງກັບຄວາມຄິດ ຫຼື ແນວຄວາມຄິດຂອງມະນຸດຢ່າງແນ່ນອນ ແລະ ຍິ່ງໄປກວ່ານັ້ນ ກໍບໍ່ໄດ້ກ່ຽວຂ້ອງກັບປັດຊະຍາສຳລັບການດຳລົງຊີວິດຂອງມະນຸດ. ນີ້ແມ່ນພາລະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດຕັ້ງໃຈກະທຳ ແລະ ຍັງແມ່ນຄວາມໝາຍອັນສຳຄັນຂອງການບັງເກີດເປັນມະນຸດທີ່ແທ້ຈິງຂອງພຣະອົງດ້ວຍ. ຕົ້ນຕໍແລ້ວພຣະເຈົ້າມາສູ່ເນື້ອໜັງເພື່ອປະຕິບັດຂັ້ນຕອນໜຶ່ງຂອງພາລະກິດທີ່ຈຳເປັນຕ້ອງປະຕິບັດໃນເນື້ອໜັງ ໂດຍບໍ່ຕ້ອງຜ່ານຂະບວນການໃດທີ່ບໍ່ສຳຄັນ ແລະ ສ່ວນດ້ານປະສົບການຂອງມະນຸດທຳມະດານັ້ນ ພຣະອົງກໍບໍ່ມີ. ພາລະກິດທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດຈຳເປັນຕ້ອງກະທຳບໍ່ໄດ້ປະກອບມີປະສົບການຂອງມະນຸດທຳມະດາ. ສະນັ້ນ ພຣະເຈົ້າມາສູ່ເນື້ອໜັງເພື່ອສຳເລັດພາລະກິດທີ່ພຣະອົງຈຳເປັນຕ້ອງກະທຳໃຫ້ສຳເລັດໃນເນື້ອໜັງ. ສ່ວນອື່ນໆແມ່ນບໍ່ກ່ຽວຂ້ອງກັບພຣະອົງ; ພຣະອົງບໍ່ໄດ້ຜ່ານຂະບວນການທີ່ບໍ່ສຳຄັນທັງຫຼາຍ. ເມື່ອພາລະກິດຂອງພຣະເອງສຳເລັດ, ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະອົງກໍສິ້ນສຸດລົງເຊັ່ນກັນ. ການເຮັດສຳເລັດຂັ້ນຕອນນີ້ແມ່ນໝາຍຄວາມວ່າ ພາລະກິດທີ່ພຣະອົງຈຳເປັນຕ້ອງກະທຳໃນເນື້ອໜັງ

ໄດ້ສິ້ນສຸດລົງ ແລະ ພັນທະກິດຂອງເນື້ອໜັງຂອງພຣະອົງແມ່ນໄດ້ສຳເລັດ. ແຕ່ພຣະອົງບໍ່ສາມາດປະຕິບັດພາລະກິດຢູ່ໃນເນື້ອໜັງໄດ້ຕະຫຼອດໄປ. ພຣະອົງຕ້ອງເຄື່ອນຍ້າຍໄປບ່ອນອື່ນເພື່ອກະທຳພາລະກິດ ເຊິ່ງເປັນບ່ອນທີ່ຢູ່ນອກເນື້ອໜັງ. ດ້ວຍເຫດນັ້ນເທົ່ານັ້ນ ຈຶ່ງສາມາດປະຕິບັດພາລະກິດຂອງພຣະອົງຢ່າງຄົບຖ້ວນ ແລະ ຂະຫຍາຍອອກໄປຢ່າງກວ້າງຂວາງ. ພຣະເຈົ້າກະທຳພາລະກິດຕາມແຜນການດັ່ງເດີມຂອງພຣະອົງ. ພາລະກິດໃດທີ່ພຣະອົງຈຳເປັນຕ້ອງກະທຳ ແລະ ພາລະກິດໃດທີ່ພຣະອົງໄດ້ສຳເລັດ, ພຣະອົງຮູ້ຢ່າງແຈ່ມແຈ້ງຄືດັ່ງຝາມືຂອງພຣະອົງ. ພຣະເຈົ້ານຳພາທຸກຄົນເພື່ອຍ່າງຕາມເສັ້ນທາງທີ່ພຣະອົງໄດ້ກຳນົດໄວ້ລ່ວງໜ້າ. ບໍ່ມີໃຜສາມາດລົບໜີໄດ້. ມີພຽງຜູ້ທີ່ປະຕິບັດຕາມການຊີ້ນຳຂອງພຣະວິນຍານຂອງພຣະເຈົ້າເທົ່ານັ້ນທີ່ຈະສາມາດເຂົ້າສູ່ບ່ອນພັກເຊົາໄດ້. ບາງເທື່ອໃນພາລະກິດຕໍ່ໄປມັນຈະບໍ່ແມ່ນພຣະເຈົ້າທີ່ເວົ້າໃນເນື້ອໜັງເພື່ອຊີ້ນຳມະນຸດ ແຕ່ເປັນພຣະວິນຍານທີ່ຢູ່ໃນຮູບແບບທີ່ຈັບຕ້ອງໄດ້ທີ່ນຳພາຊີວິດມະນຸດ. ຫຼັງຈາກນັ້ນເທົ່ານັ້ນ ມະນຸດຈະສາມາດຈັບຕ້ອງພຣະເຈົ້າຢ່າງເປັນຮູບປະທຳ, ແນມເບິ່ງພຣະເຈົ້າ ແລະ ເຂົ້າສູ່ຄວາມເປັນຈິງທີ່ພຣະເຈົ້າຕ້ອງການໄດ້ດີຂຶ້ນ ເພື່ອຈະໃຫ້ພຣະເຈົ້າທີ່ແທ້ຈິງເຮັດໃຫ້ສົມບູນ. ນີ້ແມ່ນພາລະກິດທີ່ພຣະເຈົ້າຕັ້ງໃຈຈະກະທຳໃຫ້ສຳເລັດ ແລະເປັນສິ່ງທີ່ພຣະອົງວາງແຜນໄວ້ດົນນານມາແລ້ວ. ຈາກສິ່ງນີ້, ພວກເຈົ້າທຸກຄົນຄວນເຫັນເສັ້ນທາງທີ່ພວກເຈົ້າຄວນຍ່າງໄດ້ແລ້ວ!

# ໃຫ້ຫຼຸດພົ້ນຈາກອິດທິພົນຂອງຄວາມມືດ ແລະ ເຈົ້າຈະຖືກຮັບເອົາໂດຍພຣະເຈົ້າ

ອິດທິພົນຂອງຄວາມມືດແມ່ນຫຍັງ? ສິ່ງທີ່ເອີ້ນວ່າ "ອິດທິພົນຂອງຄວາມມືດ" ນີ້ແມ່ນອິດທິພົນຈາກການຫຼອກລວງ, ຄວາມເສື່ອມຊາມ, ການຜູກມັດ ແລະ ຄວບຄຸມຜູ້ຄົນຂອງຊາຕານ; ອິດທິພົນຂອງຊາຕານແມ່ນອິດທິພົນທີ່ມີກິ່ນອາຍຂອງຄວາມຕາຍ. ທຸກຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານຈະຈິບຫາຍຢ່າງແນ່ນອນ. ເຈົ້າຈະສາມາດຫຼຸດພົ້ນຈາກອິດທິພົນຂອງຄວາມມືດໄດ້ແນວໃດຫຼັງຈາກທີ່ໄດ້ຮັບເອົາຄວາມເຊື່ອໃນພຣະເຈົ້າ? ຫຼັງຈາກເຈົ້າໄດ້ອະທິຖານຫາພຣະເຈົ້າຢ່າງຈິງໃຈ, ເຈົ້າກໍ່ຫັນຫົວໃຈຂອງເຈົ້າໄປຫາພຣະອົງຢ່າງສົມບູນ ເຊິ່ງໃນຈຸດນັ້ນ ຫົວໃຈຂອງເຈົ້າໄດ້ຮັບການດົນບັນດານໂດຍພຣະວິນຍານຂອງພຣະເຈົ້າ, ເຈົ້າເລີ່ມເຕັມໃຈທີ່ມອບຕົນເອງໃຫ້ກັບພຣະເຈົ້າຢ່າງສົມບູນ ແລະ ໃນຊ່ວງເວລານີ້ ເຈົ້າຈະຫຼຸດພົ້ນຈາກອິດທິພົນຂອງຄວາມມືດ. ຖ້າທຸກສິ່ງທີ່ມະນຸດຄົນເຮັດຄືສິ່ງທີ່ເຮັດໃຫ້ພຣະເຈົ້າພໍໃຈ ແລະ ສອດຄ່ອງກັບຂໍ້ຮຽກຮ້ອງຂອງພຣະອົງ, ແລ້ວເຂົາກໍ່ເປັນຄົນທີ່ດຳລົງຊີວິດພາຍໃນພຣະທຳຂອງພຣະເຈົ້າ ແລະ ພາຍໃຕ້ການເບິ່ງແຍງ ແລະ ການປົກປ້ອງຂອງພຣະອົງ. ຖ້າຜູ້ຄົນບໍ່ສາມາດປະຕິບັດຕາມພຣະທຳຂອງພຣະເຈົ້າໄດ້, ຖ້າພວກເຂົາພະຍາຍາມຫຼອກລວງພຣະອົງຢູ່ສະເໝີ, ເຮັດໃນລັກສະນະທີ່ພໍເປັນພິທີຕໍ່ພຣະອົງ ແລະ ບໍ່ເຊື່ອໃນການມີຢູ່ຂອງພຣະອົງ, ແລ້ວຄົນເຫຼົ່ານີ້ກໍ່ລ້ວນແລ້ວແຕ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ມະນຸດທີ່ບໍ່ໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າກໍ່ກຳລັງດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ; ນັ້ນໝາຍຄວາມວ່າ ພວກເຂົາທຸກຄົນດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ຄົນທີ່ບໍ່ເຊື່ອໃນພຣະເຈົ້າກໍ່ດຳລົງຊີວິດພາຍໃຕ້ອຳນາດຂອງຊາຕານ. ແມ່ນແຕ່ຄົນທີ່ເຊື່ອໃນການມີຢູ່ຂອງພຣະເຈົ້າກໍ່ອາດຈະບໍ່ຈຳເປັນຕ້ອງດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະອົງ ຍ້ອນຄົນທີ່ເຊື່ອພຣະອົງອາດຈະບໍ່ດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະອົງແທ້ໆ ຫຼື ສາມາດອ່ອນນ້ອມຕໍ່ພຣະເຈົ້າ. ມະນຸດຖືກຈຳກັດໃນການເຊື່ອໃນພຣະເຈົ້າ ແລະ ຍ້ອນເຂົາບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າ, ເຂົາຈຶ່ງ ຍັງດຳລົງຊີວິດຢູ່ພາຍໃນກົດເກນເດີມໆ, ຢູ່ທ່າມກາງພຣະທຳທີ່ຕາຍແລ້ວ, ມີຊີວິດທີ່ມືດມົວ ແລະ ບໍ່ແນ່ນອນ, ບໍ່ໄດ້ຮັບການຊຳລະລ້າງໃຫ້ບໍລິສຸດໂດຍພຣະເຈົ້າ ຫຼື ຖືກຮັບເອົາໂດຍພຣະອົງຢ່າງສົມບູນ. ສະນັ້ນ ໃນຂະນະທີ່ມັນຊັດເຈນຢູ່ແລ້ວວ່າ ຜູ້ບໍ່ເຊື່ອໃນພຣະເຈົ້າກໍ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ ແມ່ນແຕ່ຜູ້ທີ່ເຊື່ອໃນພຣະເຈົ້າກໍ່ອາດສາມາດດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງມັນເຊັ່ນກັນ ຍ້ອນພວກເຂົາຂາດພາລະກິດຂອງພຣະວິນຍານບໍລິສຸດ. ຜູ້ທີ່ບໍ່ໄດ້ຮັບພຣະຄຸນ ຫຼື ຄວາມເມດຕາຂອງພຣະເຈົ້າ ແລະ ຜູ້ທີ່ບໍ່ສາມາດເບິ່ງເຫັນພາລະກິດຂອງພຣະວິນຍານບໍລິສຸດລ້ວນແລ້ວແຕ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ; ໃນເວລາສ່ວນໃຫຍ່ ຜູ້ທີ່ໄດ້ຮັບພຣະຄຸນຂອງພຣະເຈົ້າ ແຕ່ບໍ່ຮູ້ຈັກພຣະອົງກໍ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງມັນເຊັ່ນກັນ. ຖ້າມະນຸດເຊື່ອໃນພຣະເຈົ້າ ແຕ່ໃຊ້ຊີວິດສ່ວນໃຫຍ່ເພື່ອດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ ແລ້ວການເປັນຢູ່ຂອງມະນຸດຄົນນີ້ກໍ່ສູນເສຍຄວາມໝາຍຂອງມັນ,

ແລ້ວມັນຈຳເປັນຫຍັງທີ່ຕ້ອງກ່າວເຖິງຜູ້ທີ່ບໍ່ເຊື່ອວ່າພຣະເຈົ້າມີຢູ່ຈິງ?

ທຸກຄົນທີ່ບໍ່ສາມາດຍອມຮັບພາລະກິດຂອງພຣະເຈົ້າ ຫຼື ຜູ້ທີ່ຍອມພາລະກິດຂອງພຣະເຈົ້າ ແຕ່ຍັງບໍ່ສາມາດຕອບສະໜອງຄຳຮຽກຮ້ອງຂອງພຣະອົງໄດ້ກໍ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ມີແຕ່ຜູ້ທີ່ສະແຫວງຫາຄວາມຈິງ ແລະ ສາມາດຕອບສະໜອງຄຳຮຽກຮ້ອງຂອງພຣະເຈົ້າເທົ່ານັ້ນຈຶ່ງຈະໄດ້ຮັບພອນຈາກພຣະອົງ ແລະ ມີແຕ່ພວກເຂົາເທົ່ານັ້ນທີ່ຈະໜີພົ້ນຈາກອິດທິພົນຂອງຄວາມມືດ. ຄົນທີ່ຍັງບໍ່ໄດ້ຖືກປ່ອຍໃຫ້ເປັນອິດສະຫຼະ, ຄົນທີ່ຖືກສິ່ງໃດໜຶ່ງຄວບຄຸມຢູ່ສະເໝີ ແລະ ຄົນບໍ່ສາມາດມອບຫົວໃຈຂອງພວກເຂົາໃຫ້ແກ່ພຣະເຈົ້າກໍ່ເປັນຄົນທີ່ຢູ່ພາຍໃຕ້ພັນທະນາການຂອງຊາຕານ ເຊິ່ງດຳລົງຊີວິດຢູ່ພາຍໃຕ້ກົນອາຍຂອງຄວາມຕາຍ. ຄົນທີ່ບໍ່ສັດຊື່ຕໍ່ໜ້າທີ່ຂອງພວກເຂົາເອງ, ຄົນທີ່ບໍ່ສັດຊື່ຕໍ່ການຝາກຝັງຂອງພຣະເຈົ້າ ແລະ ຄົນທີ່ບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາໃນຄຣິສຕະຈັກກໍ່ເປັນຄົນທີ່ກຳລັງດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ຄົນທີ່ຕັ້ງໃຈປັ່ນປ່ວນຊີວິດຄຣິສຕະຈັກ, ຄົນທີ່ຕັ້ງໃຈສ້າງຄວາມແຕກແຍກລະຫວ່າງອ້າຍເອື້ອຍນ້ອງຂອງພວກເຂົາ ຫຼື ຄົນທີ່ສ້າງຕັ້ງພັກພວກກໍ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດຫຼາຍຂຶ້ນອີກ, ຢູ່ໃນພັນທະນາການຂອງຊາຕານ. ຄົນທີ່ມີຄວາມສຳພັນບໍ່ປົກກະຕິກັບພຣະເຈົ້າ, ຄົນທີ່ມີຄວາມປາຖະໜາເກີນຕົວ, ຄົນທີ່ເອົາປຽບຄົນອື່ນຢູ່ສະເໝີ ແລະ ຄົນທີ່ບໍ່ເຄີຍສະແຫວງຫາການປ່ຽນແປງໃນອຸປະນິໄສຂອງພວກເຂົາກໍ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ຄົນທີ່ບໍ່ໃສ່ໃຈ ແລະ ບໍ່ຈິງຈັງໃນການປະຕິບັດຕາມຄວາມຈິງຂອງພວກເຂົາຈັກເທື່ອ ແລະ ຄົນທີ່ບໍ່ສະແຫວງຫາເພື່ອບັນລຸຕາມຄວາມປະສົງຂອງພຣະເຈົ້າ ແຕ່ສະແຫວງຫາເພື່ອຕອບສະໜອງເນື້ອໜັງຂອງພວກເຂົາເອງເທົ່ານັ້ນ ກໍ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດເຊັ່ນກັນ ເຊິ່ງອ້ອມລ້ອມໄປດ້ວຍຄວາມຕາຍ. ຄົນທີ່ມີສ່ວນຮ່ວມໃນການຄົດໂກງ ແລະ ການຫຼອກລວງ ເມື່ອກຳລັງເຮັດວຽກໃຫ້ກັບພຣະເຈົ້າ, ຄົນທີ່ປະຕິບັດຕໍ່ພຣະເຈົ້າພໍເປັນພິທີ, ຄົນທີ່ສໍ້ໂກງພຣະເຈົ້າ ແລະ ຄົນທີ່ວາງແຜນສຳລັບພວກເຂົາເອງຢູ່ສະເໝີກໍ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ທຸກຄົນທີ່ບໍ່ສາມາດຮັກພຣະເຈົ້າຢ່າງຈິງໃຈ, ຄົນທີ່ບໍ່ສະແຫວງຫາຄວາມຈິງ ແລະ ຄົນທີ່ບໍ່ເອົາໃຈໃສ່ໃນການປ່ຽນແປງອຸປະນິໄສຂອງພວກເຂົາກໍ່ເປັນຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ.

ຖ້າເຈົ້າຢາກໃຫ້ພຣະເຈົ້າຍົກຍ້ອງ ແລ້ວເຈົ້າຕ້ອງໜີອອກຈາກອິດທິພົນທີ່ມືດມົວຂອງຊາຕານກ່ອນ, ເປີດຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ ແລະ ຫັນຫົວໃຈມາຫາພຣະອົງຢ່າງສົມບູນ. ພຣະເຈົ້າຈະຍົກຍ້ອງສິ່ງຕ່າງໆທີ່ເຈົ້າກຳລັງເຮັດໃນຕອນນີ້ບໍ? ເຈົ້າໄດ້ຫັນຫົວໃຈຂອງເຈົ້າເຂົ້າຫາພຣະເຈົ້າແລ້ວບໍ? ສິ່ງຕ່າງໆທີ່ເຈົ້າໄດ້ເຮັດນັ້ນແມ່ນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກເຈົ້າບໍ? ພວກມັນສອດຄ່ອງກັບຄວາມຈິງບໍ? ໃຫ້ສຳຫຼວດຕົນເອງຢູ່ຕະຫຼອດເວລາ ແລະ ເອົາໃຈໃສ່ໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ເປີດຫົວໃຈຂອງເຈົ້າຢູ່ຕໍ່ໜ້າພຣະອົງ, ຮັກພຣະອົງດ້ວຍຄວາມຈິງໃຈ ແລະ ສະຫຼະຕົນເອງໃຫ້ກັບພຣະອົງຢ່າງເຫຼື້ອມໃສ. ຄົນທີ່ເຮັດແບບນີ້ ຈະໄດ້ຮັບການຍົກຍ້ອງຈາກພຣະເຈົ້າຢ່າງແນ່ນອນ. ທຸກຄົນທີ່ເຊື່ອໃນພຣະເຈົ້າ ແຕ່ບໍ່ສະແຫວງຫາຄວາມຈິງ ກໍ່ບໍ່ມີທາງທີ່ຈະໜີອອກຈາກອິດທິພົນຂອງຊາຕານໄດ້.

ທຸກຄົນທີ່ບໍ່ດຳລົງຊີວິດຂອງພວກເຂົາດ້ວຍຄວາມຊື່ສັດ, ຄົນທີ່ປະພຶດຢ່າງໜຶ່ງຕໍ່ໜ້າຄົນອື່ນ ແຕ່ເຮັດອີກຢ່າງລັບຫຼັງຂອງພວກເຂົາ, ຄົນທີ່ສະແດງລັກສະນະຖ່ອມຕົນ, ອົດທົນ ແລະ ມີຄວາມຮັກ ເຖິງແມ່ນແກ່ນແທ້ຂອງພວກເຂົາເປັນຄົນຮ້າຍກາດ, ມີເລ່ລ່ຽມ ແລະ ບໍ່ຈົງຮັກພັກດີຕໍ່ພຣະເຈົ້າ, ຄົນເຫຼົ່ານີ້ເປັນຕົວແທນທົ່ວໄປຂອງຄົນທີ່ດຳລົງຊີວິດພາຍໃຕ້ອິດທິພົນຂອງຄວາມມືດມົວ; ພວກເຂົາເປັນເຊື້ອສາຍຂອງງູພິດ. ຄົນທີ່ພຽງແຕ່ເຊື່ອໃນພຣະເຈົ້າເພື່ອຜົນປະໂຫຍດຂອງພວກເຂົາເອງ, ຄົນທີ່ຖືວ່າຕົນເອງຊອບທຳ ແລະ ຈອງຫອງ, ຄົນທີ່ອວດໂອ້ ແລະ ຄົນທີ່ປົກປ້ອງສະຖານະຂອງພວກເຂົາເອງແມ່ນຄົນທີ່ຮັກຊາຕານ ແລະ ຕໍ່ຕ້ານຄວາມຈິງ. ຄົນເຫຼົ່ານີ້ຕໍ່ຕ້ານພຣະເຈົ້າ ແລະ ເປັນຂອງຊາຕານໂດຍສົມບູນ. ຄົນຄົນທີ່ບໍ່ເອົາໃຈໃສ່ໃນພາລະຂອງພຣະເຈົ້າ, ຄົນທີ່ບໍ່ຮັບໃຊ້ພຣະເຈົ້າຢ່າງໝົດໃຈ, ຄົນທີ່ເປັນຫ່ວງຜົນປະໂຫຍດຂອງພວກເຂົາເອງ ແລະ ຜົນປະໂຫຍດໃນຄອບຄົວຂອງພວກເຂົາຢູ່ສະເໝີ, ຄົນທີ່ບໍ່ສາມາດປະຖິ້ມທຸກຢ່າງເພື່ອສະຫຼະຕົນເອງໃຫ້ກັບພຣະເຈົ້າ ແລະ ຄົນທີ່ບໍ່ເຄີຍດຳລົງຊີວິດຕາມພຣະທຳຂອງພຣະເຈົ້າກໍ່ເປັນຄົນທີ່ດຳລົງຊີວິດຢູ່ນອກພຣະທຳຂອງພຣະອົງ. ຄົນດັ່ງກ່າວບໍ່ສາມາດຮັບເອົາການຍົກຍ້ອງຈາກພຣະເຈົ້າ.

ເມື່ອພຣະເຈົ້າເນລະມິດສ້າງມະນຸດ, ມັນກໍ່ເພື່ອໃຫ້ພວກເຂົາສາມາດມີຄວາມສຸກກັບຄວາມອຸດົມສົມບູນຂອງພຣະອົງ ແລະ ຮັກພຣະອົງຢ່າງແທ້ຈິງ; ດ້ວຍວິທີນີ້ ມະນຸດຈະດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະອົງ. ມື້ນີ້ ສຳລັບທຸກຄົນທີ່ບໍ່ສາມາດຮັກພຣະເຈົ້າ, ບໍ່ເອົາໃຈໃສ່ພາລະຂອງພຣະອົງ, ບໍ່ສາມາດມອບຫົວໃຈຂອງພວກເຂົາໃຫ້ກັບພຣະອົງຢ່າງສົມບູນ, ບໍ່ສາມາດຮັບເອົາໃຈຂອງພຣະອົງມາເປັນຫົວໃຈຂອງພວກເຂົາເອງ ແລະ ບໍ່ສາມາດແບກຮັບພາລະຂອງພຣະອົງມາເປັນພາລະຂອງພວກເຂົາເອງ, ແສງສະຫວ່າງຂອງພຣະເຈົ້າຈະບໍ່ສ່ອງໃສ່ຄົນດັ່ງກ່າວ ແລະ ດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດມົວ. ພວກເຂົາກຳລັງຢູ່ໃນເສັ້ນທາງທີ່ຕໍ່ຕ້ານຄວາມປະສົງຂອງພຣະເຈົ້າຢ່າງສິ້ນເຊີງ ແລະ ບໍ່ມີຄວາມຈິງແມ່ນແຕ່ໜ້ອຍດຽວໃນແມ່ນຫຍັງກໍ່ຕາມທີ່ພວກເຂົາເຮັດ. ພວກເຂົາກິ້ງເກືອກຢູ່ໃນຕົມຮ່ວມກັບຊາຕານ; ພວກເຂົາເປັນຜູ້ທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດມົວ. ຖ້າເຈົ້າສາມາດກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢູ່ເລື້ອຍໆ ແລະເອົາໃຈໃສ່ຄວາມປະສົງຂອງພຣະອົງ ແລະ ນຳພຣະທຳຂອງພຣະອົງໄປປະຕິບັດ, ແລ້ວເຈົ້າກໍ່ເປັນຂອງພຣະເຈົ້າ ແລະ ເຈົ້າເປັນຜູ້ທີ່ດຳລົງຊີວິດຢູ່ໃນພຣະທຳຂອງພຣະອົງ. ເຈົ້າເຕັມໃຈຫຼົບໜີຈາກອຳນາດຂອງຊາຕານ ແລະ ດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະເຈົ້າບໍ? ຖ້າເຈົ້າດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ, ແລ້ວພຣະວິນຍານບໍລິສຸດກໍ່ຈະມີໂອກາດທີ່ຈະປະຕິບັດພາລະກິດຂອງພຣະອົງ; ຖ້າເຈົ້າດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຊາຕານ, ແລ້ວເຈົ້າກໍ່ຈະບໍ່ໃຫ້ໂອກາດດັ່ງກ່າວແກ່ພຣະວິນຍານບໍລິສຸດ. ພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນມະນຸດ, ແສງສະຫວ່າງທີ່ພຣະອົງສ່ອງໃຫ້ແກ່ພວກເຂົາ ແລະ ຄວາມໝັ້ນໃຈທີ່ພຣະອົງມອບໃຫ້ພວກເຂົາກໍ່ຢູ່ໄດ້ພຽງໄລຍະສັ້ນ; ຖ້າຜູ້ຄົນບໍ່ລະມັດລະວັງ ແລະ ບໍ່ເອົາໃຈໃສ່, ແລ້ວພາລະກິດຂອງພຣະວິນຍານບໍລິສຸດກະທຳກໍຈະຜ່ານພວກເຂົາໄປ. ຖ້າມະນຸດດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ, ແລ້ວພຣະວິນຍານບໍລິສຸດກໍ່ຈະຢູ່ກັບພວກເຂົາ

ແລະ ປະຕິບັດພາລະກິດໃນພວກເຂົາ. ຖ້າມະນຸດບໍ່ດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ, ແລ້ວພວກເຂົາກໍ່ດຳລົງຊີວິດຢູ່ໃນພັນທະນາການຂອງຊາຕານ. ຖ້າມະນຸດດຳລົງຊີວິດຢູ່ກັບອຸປະນິໄສທີ່ເສື່ອມຊາມ, ແລ້ວພວກເຂົາກໍ່ຈະບໍ່ມີການສະຖິດ ຫຼື ພາລະກິດຂອງພຣະວິນຍານບໍລິສຸດ. ຖ້າເຈົ້າດຳລົງຊີວິດຢູ່ໃນຂອບເຂດພຣະທຳຂອງພຣະເຈົ້າ ແລະ ຖ້າເຈົ້າດຳລົງຊີວິດຢູ່ໃນສະພາວະທີ່ພຣະເຈົ້າຕ້ອງການ, ແລ້ວເຈົ້າກໍ່ເປັນຄົນຂອງພຣະອົງ ແລະ ພາລະກິດຂອງພຣະອົງກໍ່ຈະຖືກປະຕິບັດໃນຕົວເຈົ້າ; ຖ້າເຈົ້າບໍ່ດຳລົງຊີວິດພາຍໃນຂອບເຂດຄວາມຕ້ອງການຂອງພຣະເຈົ້າ ແຕ່ດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ, ແລ້ວເຈົ້າກໍ່ກຳລັງດຳລົງຊີວິດຢູ່ພາຍໃຕ້ຄວາມເສື່ອມຊາມຂອງຊາຕານຢ່າງແນ່ນອນ. ມີພຽງແຕ່ໂດຍການດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ ແລະ ການມອບຫົວໃຈຂອງເຈົ້າໃຫ້ກັບພຣະອົງເທົ່ານັ້ນ ເຈົ້າຈຶ່ງຈະສາມາດບັນລຸຕາມຄວາມຕ້ອງການຂອງພຣະອົງໄດ້; ເຈົ້າຕ້ອງປະຕິບັດຕາມສິ່ງທີ່ພຣະເຈົ້າກ່າວໄວ້, ເຮັດໃຫ້ຖ້ອຍຄຳຂອງພຣະອົງເປັນພື້ນຖານໃນການເປັນຢູ່ ແລະ ຄວາມເປັນຈິງໃນຊີວິດຂອງເຈົ້າ; ໃນເມື່ອນັ້ນເອງ ເຈົ້າຈຶ່ງຈະເປັນຂອງພຣະເຈົ້າ. ຖ້າເຈົ້າປະຕິບັດຕາມຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ, ພຣະອົງກໍ່ຈະປະຕິບັດພາລະກິດໃນຕົວເຈົ້າ ແລະ ເຈົ້າກໍ່ຈະດຳລົງຊີວິດຢູ່ພາຍໃຕ້ການອວຍພອນຂອງພຣະອົງ, ໃນແສງສະຫວ່າງຈາກໃບໜ້າຂອງພຣະອົງ; ເຈົ້າຈະເຂົ້າໃຈພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດ ແລະ ຮູ້ສຶກເຖິງຄວາມປິຕິຍິນດີໃນການສະຖິດຂອງພຣະເຈົ້າ.

ເພື່ອຫຼີບໜີຈາກອິດທິພົນຂອງຄວາມມືດ ມົວ, ເຈົ້າຕ້ອງຈົງຮັກພັກດີຕໍ່ພຣະເຈົ້າກ່ອນ ແລະ ມີຫົວໃຈທີ່ກະຕືລືລົ້ນໃນການສະແຫວງຫາຄວາມຈິງ; ໃນເມື່ອນັ້ນເອງ ເຈົ້າຈຶ່ງມີສະພາວະທີ່ຖືກຕ້ອງ. ການດຳລົງຊີວິດຢູ່ໃນສະພາວະທີ່ຖືກຕ້ອງແມ່ນເງື່ອນໄຂເບື້ອງຕົ້ນສຳລັບການຫຼີບໜີຈາກອິດທິພົນຂອງຄວາມມືດມົວ. ການບໍ່ມີສະພາວະທີ່ຖືກຕ້ອງບໍ່ແມ່ນການຈົງຮັກພັກດີຕໍ່ພຣະເຈົ້າ ແລະ ບໍ່ແມ່ນການມີຫົວໃຈທີ່ກະຕືລືລົ້ນໃນການສະແຫວງຫາຄວາມຈິງ; ແລະ ການຫຼີບໜີຈາກອິດທິພົນຂອງຄວາມມືດມົວກໍ່ຈະເປັນໄປບໍ່ໄດ້. ພຣະທຳຂອງເຮົາແມ່ນພື້ນຖານສຳລັບການທີ່ມະນຸດຫຼີບໜີຈາກອິດທິພົນທີ່ມືດມົວ ແລະ ຄົນທີ່ບໍ່ສາມາດປະຕິບັດຕາມພຣະທຳຂອງເຮົາໄດ້ກໍ່ຈະບໍ່ສາມາດຫຼີບໜີຈາກພັນທະນາການໃນອິດທິພົນຂອງຄວາມມືດມົວໄດ້. ການດຳລົງຊີວິດຢູ່ໃນສະພາວະທີ່ຖືກຕ້ອງຄືການດຳລົງຊີວິດຢູ່ພາຍໃຕ້ການຊີ້ນຳຈາກພຣະທຳຂອງພຣະເຈົ້າ, ການດຳລົງຊີວິດຢູ່ໃນສະພາວະທີ່ຈົງຮັກພັກດີຕໍ່ພຣະເຈົ້າ, ການດຳລົງຊີວິດຢູ່ໃນສະພາວະທີ່ສະແຫວງຫາຄວາມຈິງ, ການດຳລົງຊີວິດຢູ່ໃນຄວາມເປັນຈິງທີ່ສະຫຼະຕົນເອງເພື່ອເຫັນແກ່ພຣະເຈົ້າ ແລະ ການດຳລົງຊີວິດຢູ່ໃນສະພາວະທີ່ຮັກພຣະເຈົ້າຢ່າງແທ້ຈິງ. ຄົນທີ່ດຳລົງຊີວິດຢູ່ໃນສະພາວະເຫຼົ່ານີ້ ແລະ ຢູ່ພາຍໃນຄວາມເປັນຈິງນີ້ກໍ່ຈະຄ່ອຍໆປ່ຽນແປງ ເມື່ອພວກເຂົາເຂົ້າສູ່ຄວາມຈິງທີ່ເລິກເຊິ່ງ ແລະ ພວກເຂົາຈະປ່ຽນແປງເມື່ອພາລະກິດເລິກເຊິ່ງຂຶ້ນ; ແລະ ໃນທີ່ສຸດ ພວກເຂົາກໍ່ຈະກາຍມາເປັນຄົນທີ່ຖືກຮັບເອົາໂດຍພຣະເຈົ້າຢ່າງແນ່ນອນ ແລະ ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ. ຄົນທີ່ໄດ້ຫຼີບໜີຈາກອິດທິພົນຂອງຄວາມມືດມົວກໍ່ສາມາດຄົ້ນຫາຄວາມປະສົງຂອງພຣະເຈົ້າເທື່ອລະໜ້ອຍ ແລະ ມາເຂົ້າໃຈຄວາມປະສົງເທື່ອລະໜ້ອຍ, ໃນທີ່ສຸດກໍ່ກາຍເປັນມິດສະຫາຍຂອງພຣະເຈົ້າ. ພວກເຂົາບໍ່ພຽງແຕ່ບໍ່ມີແນວຄິດຕ່າງໆກ່ຽວກັບພຣະເຈົ້າ ແລະ

ບໍ່ກະບົດຕໍ່ພຣະອົງເທົ່ານັ້ນ, ແຕ່ພວກເຂົາເຖິງກັບລັງກຽດແນວຄິດເຫຼົ່ານັ້ນ ແລະ ຄວາມກະບົດທີ່ຄອບງຳພວກເຂົາໃນເມື່ອກ່ອນ ແລະ ຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າກໍ່ເກີດຂຶ້ນຢູ່ໃນຫົວໃຈຂອງພວກເຂົາ. ຄົນທີ່ບໍ່ສາມາດຫຼົບໜີຈາກອິດທິພົນຂອງຄວາມມືດມົວກໍ່ລ້ວນແລ້ວແຕ່ໝົກໝຸ່ນກັບເນື້ອໜັງ ແລະ ເຕັມໄປດ້ວຍຄວາມກະບົດ; ຫົວໃຈຂອງພວກເຂົາເຕັມໄປດ້ວຍແນວຄິດຂອງມະນຸດ ແລະ ປັດຊະຍາສຳລັບການດຳລົງຊີວິດ ພ້ອມທັງເຈດຕະນາ ແລະ ຄວາມຕັ້ງໃຈຂອງພວກເຂົາເອງ. ສິ່ງທີ່ພຣະເຈົ້າຮຽກຮ້ອງຄືຄວາມຮັກຢ່າງດຽວຈາກມະນຸດ; ສິ່ງທີ່ພຣະອົງຮຽກຮ້ອງກໍ່ຄືໃຫ້ມະນຸດເຕັມໄປດ້ວຍພຣະທຳຂອງພຣະອົງ ແລະ ເຕັມໄປດ້ວຍຄວາມຮັກໃນຫົວໃຈສຳລັບພຣະອົງ. ການດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ, ການຄົ້ນຫາສິ່ງທີ່ພວກເຂົາຄວນສະແຫວງຫາໃນພຣະທຳຂອງພຣະອົງ, ການຮັກພຣະເຈົ້າຍ້ອນພຣະທຳຂອງພຣະອົງ, ການດຳເນີນການສຳລັບພຣະທຳຂອງພຣະເຈົ້າ, ການມີຊີວິດຢູ່ເພື່ອພຣະທຳຂອງພຣະເຈົ້າ, ສິ່ງເຫຼົ່ານີ້ຄືເປົ້າໝາຍທີ່ມະນຸດຕ້ອງພະຍາຍາມບັນລຸ. ທຸກສິ່ງຕ້ອງຖືກສ້າງຂຶ້ນເທິງພຣະທຳຂອງພຣະເຈົ້າ; ມີແຕ່ເມື່ອນັ້ນ ມະນຸດຈຶ່ງຈະສາມາດຕອບສະໜອງຕາມຄວາມຕ້ອງການຂອງພຣະເຈົ້າໄດ້. ຖ້າມະນຸດບໍ່ປະກອບດ້ວຍພຣະທຳຂອງພຣະເຈົ້າ, ແລ້ວເຂົາກໍ່ເປັນພຽງໜອນທີ່ຖືກຊາຕານຄອບງຳ! ໃຫ້ຊັ່ງຊາເບິ່ງວ່າ: ພຣະທຳຂອງພຣະເຈົ້າໄດ້ຝັງຮາກພາຍໃນເຈົ້າຫຼາຍສໍ່າໃດ? ມີສິ່ງໃດແດ່ທີ່ເຈົ້າກຳລັງໃຊ້ຊີວິດໂດຍສອດຄ່ອງກັບພຣະທຳຂອງພຣະອົງ? ມີສິ່ງໃດແດ່ທີ່ເຈົ້າບໍ່ໄດ້ໃຊ້ຊີວິດໂດຍສອດຄ່ອງກັບພຣະທຳຂອງພຣະເຈົ້າ? ຖ້າພຣະທຳຂອງພຣະເຈົ້າຍັງບໍ່ໄດ້ຍຶດຄອງຕົວເຈົ້າຢ່າງສົມບູນ, ແລ້ວແມ່ນຫຍັງແທ້ໆທີ່ຄອບງຳຫົວໃຈຂອງເຈົ້າ? ໃນຊີວິດປະຈຳວັນຂອງເຈົ້າ, ເຈົ້າຖືກຊາຕານຄວບຄຸມ ຫຼື ເຈົ້າຖືກຄອບງຳໂດຍພຣະທຳຂອງພຣະເຈົ້າ? ພຣະທຳຂອງພຣະອົງຄືພື້ນຖານທີ່ຄຳອະທິຖານຂອງເຈົ້າອີງໃສ່ບໍ? ເຈົ້າໄດ້ອອກມາຈາກສະພາວະທີ່ບໍ່ດີຂອງເຈົ້າຜ່ານແສງສະຫວ່າງໃນພຣະທຳຂອງພຣະເຈົ້າບໍ? ການຖືເອົາພຣະທຳຂອງພຣະເຈົ້າເປັນຮາກຖານສຳລັບການເປັນຢູ່ຂອງເຈົ້າ, ນີ້ແມ່ນສິ່ງທີ່ທຸກຄົນຄວນປະຕິບັດ. ຖ້າພຣະທຳຂອງພຣະເຈົ້າບໍ່ໄດ້ຢູ່ໃນຊີວິດຂອງເຈົ້າ, ແລ້ວເຈົ້າກໍ່ກຳລັງດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດມົວ, ເຈົ້າກະບົດຕໍ່ພຣະເຈົ້າ, ເຈົ້າຕໍ່ຕ້ານພຣະອົງ ແລະ ເຈົ້າໝິ່ນປະໝາດພຣະນາມຂອງພຣະອົງ; ຄວາມເຊື່ອໃນພຣະເຈົ້າຂອງຄົນດັ່ງກ່າວຄືບັນຫາ ແລະ ຄວາມວຸ້ນວາຍແທ້ໆ. ມີຫຼາຍສໍ່າໃດໃນຊີວິດຂອງເຈົ້າທີ່ໄດ້ດຳລົງຊີວິດຕາມພຣະທຳຂອງພຣະອົງ? ມີຫຼາຍສໍ່າໃດໃນຊີວິດຂອງເຈົ້າທີ່ບໍ່ໄດ້ດຳລົງຊີວິດຕາມພຣະທຳຂອງພຣະອົງ? ມີພຣະທຳຫຼາຍສໍ່າໃນບັນດາພຣະທຳທີ່ພຣະເຈົ້າຮຽກຮ້ອງຈາກເຈົ້າທີ່ໄດ້ສຳເລັດໃນຕົວເຈົ້າ? ມີພຣະທຳຫຼາຍສໍ່າໃດທີ່ໄດ້ສູນເສຍໃນຕົວເຈົ້າ? ເຈົ້າໄດ້ພິຈາລະນາເບິ່ງສິ່ງເຫຼົ່ານີ້ຢ່າງລະອຽດແລ້ວບໍ?

ການຫຼົບໜີຈາກອິດທິພົນຂອງຄວາມມືດມົວແມ່ນຈຳເປັນຕ້ອງມີພາລະກິດຂອງພຣະວິນຍານບໍລິສຸດ ແລະ ການຮ່ວມມືຢ່າງອຸທິດຕົນຂອງມະນຸດ. ເປັນຫຍັງເຮົາຈຶ່ງເວົ້າວ່າມະນຸດບໍ່ຢູ່ໃນເສັ້ນທາງທີ່ຖືກຕ້ອງ? ຄົນທີ່ຢູ່ໃນເສັ້ນທາງທີ່ຖືກຕ້ອງ ສາມາດມອບຫົວໃຈຂອງພວກເຂົາໃຫ້ພຣະເຈົ້າກ່ອນ. ນີ້ຄືໜ້າທີ່ທີ່ຕ້ອງໃຊ້ເວລາຍາວນານຫຼາຍໃນການປະຕິບັດ, ຍ້ອນມະນຸດຊາດໄດ້ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດມົວຢູ່ສະເໝີ ແລະ ຢູ່ພາຍໃຕ້ພັນທະນາການຂອງຊາຕານເປັນເວລາຫຼາຍພັນ

ປີ. ສະນັ້ນ ທາງເຂົ້ານີ້ຈຶ່ງບໍ່ສາມາດບັນລຸໄດ້ພາຍໃນມື້ໜຶ່ງ ຫຼື ສອງມື້. ເຮົາຍົກປະເດັນນີ້ຂຶ້ນມາເວົ້າໃນມື້ນີ້ກໍ່ເພື່ອໃຫ້ມະນຸດສາມາດເຂົ້າໃຈກ່ຽວກັບສະພາວະຂອງພວກເຂົາເອງ; ຫຼັງຈາກທີ່ມະນຸດສາມາດແຍກແຍະສິ່ງທີ່ເປັນອິດທິພົນຂອງຄວາມມືດມົວ ແລະ ຄວາມໝາຍຂອງການດຳລົງຊີວິດຢູ່ໃນແສງສະຫວ່າງ, ແລ້ວທາງເຂົ້າຈຶ່ງຈະງ່າຍຂຶ້ນຫຼາຍ. ນີ້ກໍ່ເພາະເຈົ້າຕ້ອງຮູ້ວ່າແມ່ນຫຍັງຄືອິດທິພົນຂອງຊາຕານກ່ອນທີ່ເຈົ້າຈະສາມາດຫຼີບໜີຈາກມັນໄດ້; ພຽງແຕ່ຫຼັງຈາກນັ້ນ ເຈົ້າຈຶ່ງຈະມີທາງທີ່ຈະກຳຈັດມັນຖິ້ມ. ສຳລັບສິ່ງທີ່ຄວນເຮັດຕໍ່ຈາກນັ້ນ, ນັ້ນຄືທຸລະຂອງມະນຸດເອງ. ໃຫ້ເຂົ້າສູ່ທຸກຢ່າງຈາກລັກສະນະທີ່ດີ ແລະ ບໍ່ໃຫ້ລໍຖ້າຢູ່ຊື່ໆ. ໃນລັກສະນະນີ້ເທົ່ານັ້ນ, ເຈົ້າຈຶ່ງຈະສາມາດຖືກຮັບເອົາໂດຍພຣະເຈົ້າ.

# ໃນຄວາມເຊື່ອ, ຄົນໆໜຶ່ງຕ້ອງໃຫ້ຄວາມສຳຄັນກັບຄວາມເປັນຈິງ ນັ້ນກໍຄື ການເຂົ້າຮ່ວມໃນພິທີກຳທາງສາສະໜາບໍ່ແມ່ນຄວາມເຊື່ອ

ເຈົ້າປະຕິບັດພິທີກຳທາງສາສະໜາຫຼາຍສໍ່າໃດ? ເຈົ້າກະບົດຕໍ່ພຣະທຳຂອງພຣະເຈົ້າ ແລະ ໄປຕາມທາງຂອງເຈົ້າເອງຈັກຄັ້ງແລ້ວ? ມີຈັກຄັ້ງທີ່ເຈົ້ານຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ ເພາະເຈົ້າຄຳນຶງເຖິງພາລະຂອງພຣະອົງຢ່າງແທ້ຈິງ ແລະ ສະແຫວງຫາເພື່ອເຮັດຕາມຄວາມປະສົງຂອງພຣະອົງ? ເຈົ້າຄວນເຂົ້າໃຈພຣະທຳຂອງພຣະເຈົ້າ ແລະ ນຳມັນເຂົ້າສູ່ການປະຕິບັດຕາມນັ້ນ. ໃຫ້ມີຫຼັກການໃນທຸກການກະທຳ ແລະ ການປະຕິບັດຂອງເຈົ້າ, ເຖິງແມ່ນວ່າສິ່ງນີ້ຈະບໍ່ໄດ້ໝາຍເຖິງການປະຕິບັດຕາມກົດລະບຽບ ຫຼື ການເຮັດບາງສິ່ງເພື່ອສະແດງອອກຢ່າງບໍ່ເຕັມໃຈເທົ່ານັ້ນ; ກົງກັນຂ້າມ, ມັນໝາຍເຖິງການປະຕິບັດຄວາມຈິງ ແລະ ການດຳລົງຊີວິດຕາມພຣະທຳຂອງພຣະເຈົ້າ. ການປະຕິບັດແບບນີ້ເທົ່ານັ້ນຈະເຮັດໃຫ້ພຣະເຈົ້າພໍໃຈ. ການປະຕິບັດໃດໜຶ່ງທີ່ເຮັດໃຫ້ພຣະເຈົ້າພໍໃຈບໍ່ແມ່ນກົດລະບຽບ, ແຕ່ເປັນການປະຕິບັດຄວາມຈິງ. ບາງຄົນມີຄວາມມັກທີ່ຈະດຶງດູດຄວາມສົນໃຈມາຫາຕົນເອງ. ເມື່ອຢູ່ຕໍ່ໜ້າອ້າຍເອື້ອຍນ້ອງຂອງພວກເຂົາ, ພວກເຂົາອາດເວົ້າວ່າພວກເຂົາຕິດໜີ້ບຸນຄຸນພຣະເຈົ້າ, ແຕ່ເມື່ອຢູ່ລັບຫລັງ ພວກເຂົາກໍບໍ່ປະຕິບັດຕາມຄວາມຈິງ ແລະ ເຮັດໃນທາງທີ່ກົງກັນຂ້າມຢ່າງສິ້ນເຊີງ. ສິ່ງເຫຼົ່ານີ້ບໍ່ແມ່ນພວກຟາຣີຊາຍທີ່ເຄັ່ງສາສະໜາບໍ? ບຸກຄົນໃດທີ່ຮັກພຣະເຈົ້າຢ່າງແທ້ຈິງ ແລະ ມີຄວາມຈິງແມ່ນຄົນທີ່ມີຄວາມຈິງຮັກພັກດີຕໍ່ພຣະເຈົ້າ ພຽງແຕ່ບໍ່ເປີດເຜີຍອອກສູ່ພາຍນອກ. ບຸກຄົນນັ້ນຈະເຕັມໃຈປະຕິບັດຄວາມຈິງເມື່ອເກີດມີບັນຫາ ແລະ ຈະບໍ່ເວົ້າ ຫຼື ເຮັດໄປໃນທຳນອງທີ່ຂັດກັບຄວາມສຳນຶກຂອງພວກເຂົາ. ບຸກຄົນປະເພດນີ້ຈະສະແດງອອກເຖິງສະຕິປັນຍາ ເມື່ອເກີດມີບັນຫາ ແລະ ມີຫຼັກການໃນການກະທຳຂອງເຂົາ ບໍ່ວ່າຈະຢູ່ໃນສະຖານະການໃດໆກໍຕາມ. ບຸກຄົນແບບນີ້ແມ່ນບຸກຄົນທີ່ສາມາດໃຫ້ບໍລິການຢ່າງແທ້ຈິງ. ມີບາງຄົນມັກເວົ້າແຕ່ປາກເພື່ອສະແດງຄວາມຮູ້ບຸນຄຸນຂອງພວກເຂົາທີ່ມີຕໍ່ພຣະເຈົ້າ; ພວກເຂົາໃຊ້ເວລາແຕ່ລະມື້ຢູ່ກັບຄວາມເປັນຫ່ວງກັງວົນ, ໂອ້ອວດວ່າໂຕເອງດີເດັ່ນ ແລະ ທຳທ່າເຮັດໂຕໜ້າສົງສານ. ຈັ່ງແມ່ນເປັນຕາໜ້າລັງກຽດແທ້ໆ! ຖ້າເຈົ້າຖາມພວກເຂົາວ່າ "ເຈົ້າສາມາດບອກຂ້ອຍໄດ້ບໍວ່າເຈົ້າຕິດໜີ້ບຸນຄຸນພຣະເຈົ້າແນວໃດ?" ແລ້ວພວກເຂົາກໍຈະປາກບໍ່ອອກຈັກຄຳ. ຖ້າເຈົ້າຈິງຮັກພັກດີຕໍ່ພຣະເຈົ້າ ກໍຢ່າເວົ້າກ່ຽວກັບມັນຢູ່ພາຍນອກ; ກົງກັນຂ້າມ, ໃຫ້ສະແດງຄວາມຮັກຂອງເຈົ້າຕໍ່ພຣະເຈົ້າໂດຍວິທີການປະຕິບັດຕົວຈິງ ແລະ ອະທິຖານຫາພຣະອົງດ້ວຍຫົວໃຈທີ່ແທ້ຈິງ. ຄົນທີ່ພຽງແຕ່ພົວພັນກັບພຣະເຈົ້າດ້ວຍວາຈາ ແລະ ພໍເປັນພິທີລ້ວນແລ້ວແຕ່ເປັນຄົນໜ້າຊື່ໃຈຄົດທັງນັ້ນ! ບາງຄົນເວົ້າເຖິງການຕິດໜີ້ບຸນຄຸນຕໍ່ພຣະເຈົ້າໃນແຕ່ລະເທື່ອທີ່ພວກເຂົາອະທິຖານ ແລະ ຈະເລີ່ມຮ້ອງໄຫ້ແຕ່ລະເທື່ອທີ່ພວກເຂົາອະທິຖານ, ເຖິງແມ່ນວ່າຈະບໍ່ໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດກໍຕາມ. ຄົນພວກນີ້ແມ່ນຖືກຄອບງຳໂດຍພິທີກຳ ແລະ ແນວຄິດທາງສາສະໜາ; ພວກເຂົາດຳເນີນຊີວິດຕາມພິທີກຳ ແລະ ແນວຄິດດັ່ງກ່າວ, ເຊື່ອຢູ່ສະເໝີວ່າການກະທຳ

ເຫຼົ່ານັ້ນຈະເຮັດໃຫ້ພຣະເຈົ້າພໍໃຈ ແລະ ພຣະອົງໂປດປານຄວາມເຄັ່ງໃນສາສະໜາແບບຜິວເຜີນ ຫຼື ການສະແດງນໍ້າຕາໂສກເສົ້າເສຍໃຈ. ມັນຈະມີຜົນດີຫຍັງຈາກການກະທຳຂອງຄົນທີ່ໄຮ້ເຫດຜົນເຫຼົ່ານີ້? ເພື່ອສະແດງເຖິງຄວາມຖ່ອມຕົວຂອງພວກເຂົາ, ບາງຄົນທຳທ່າສຸພາບອ່ອນໂຍນເມື່ອເວົ້າຢູ່ຕໍ່ໜ້າຄົນອື່ນ. ບາງຄົນກໍຈົງໃຈເປັນທາດຮັບໃຊ້ເໝືອນລູກແກະທີ່ຂາດກຳລັງໃດໆທັງສິ້ນເມື່ອຢູ່ຕໍ່ໜ້າຄົນອື່ນ. ນີ້ແມ່ນລັກສະນະທີ່ເໝາະສົມກັບຄົນແຫ່ງອານາຈັກບໍ? ຄົນແຫ່ງອານາຈັກຄວນຈະມີຊີວິດຊີວາ ແລະ ເປັນອິດສະຫຼະ, ໄຮ້ດຽງສາ ແລະ ເປີດເຜີຍ, ຊື່ສັດ ແລະ ເປັນຕາຮັກ ແລະ ເປັນຄົນທີ່ຢູ່ໃນສະພາບເສລີ. ພວກເຂົາຄວນມີຄວາມຊື່ສັດ ແລະ ກຽດສັກສີ ແລະ ສາມາດຢືນເປັນພະຍານຢູ່ທຸກບ່ອນທີ່ພວກເຂົາໄປ; ຜູ້ຄົນດັ່ງກ່າວແມ່ນເປັນທີ່ຮັກທັງຂອງພຣະເຈົ້າ ແລະ ມະນຸດ. ຄົນທີ່ເປັນຜູ້ທີ່ມີຄວາມເຊື່ອໃໝ່ກໍຈະມີການປະຕິບັດທາງພາຍນອກຫຼາຍເກີນໄປ; ກ່ອນອື່ນພວກເຂົາຕ້ອງໄດ້ຜ່ານໄລຍະເວລາຂອງການຈັດການ ແລະ ແຕກຫັກ. ຄົນທີ່ມີຄວາມເຊື່ອໃນພຣະເຈົ້າຢ່າງເລິກເຊິ່ງກໍບໍ່ໄດ້ແຕກຕ່າງຈາກຄົນອື່ນໃນພາຍນອກ, ແຕ່ການປະພຶດ ແລະ ການກະທຳຂອງພວກເຂົາແມ່ນເປັນຕາຍ້ອງຍໍສັນເສີນໄດ້. ມີພຽງຜູ້ຄົນດັ່ງກ່າວເທົ່ານັ້ນທີ່ສາມາດຖືວ່າດຳເນີນຊີວິດຕາມພຣະທຳຂອງພຣະເຈົ້າ. ຖ້າເຈົ້າເທດສະໜາກ່ຽວກັບຂ່າວປະເສີດທຸກວັນໃຫ້ກັບຫຼາກຫຼາຍຄົນເພື່ອພະຍາຍາມນຳພາພວກເຂົາໄປສູ່ຄວາມລອດພົ້ນ, ແຕ່ໃນທີ່ສຸດ ເຈົ້າຍັງຍຶດຕິດຢູ່ກັບກົດລະບຽບ ແລະ ຫຼັກຄຳສອນ, ເຈົ້າກໍບໍ່ສາມາດນຳສະຫງ່າລາສີມາສູ່ພຣະເຈົ້າໄດ້. ຄົນດັ່ງກ່າວເປັນພຽງຄົນທີ່ເຄັ່ງຄັດໃນສາສະໜາ ພ້ອມທັງເປັນຄົນທີ່ໜ້າຊື່ໃຈຄົດອີກດ້ວຍ. ເມື່ອໃດກໍຕາມທີ່ຄົນທາງສາສະໜາເຫຼົ່ານັ້ນຊຸມນຸມກັນ, ພວກເຂົາອາດຖາມວ່າ "ເອື້ອຍ, ເຈົ້າເປັນແນວໃດທຸກມື້ນີ້?" ລາວອາດຈະຕອບວ່າ "ຂ້ອຍຮູ້ສຶກວ່າຂ້ອຍເປັນໜີ້ບຸນຄຸນພຣະເຈົ້າ ແລະ ຂ້ອຍບໍ່ສາມາດບັນລຸຄວາມປະສົງຂອງພຣະອົງໄດ້". ອີກຄົນໜຶ່ງກໍອາດເວົ້າວ່າ "ຂ້ອຍກໍຮູ້ສຶກເປັນໜີ້ບຸນຄຸນພຣະເຈົ້າຄືກັນ ແລະ ຂ້ອຍບໍ່ສາມາດເຮັດໃຫ້ພຣະອົງເພິ່ງພໍໃຈໄດ້". ສອງສາມປະໂຫຍກເຫຼົ່ານີ້ ແລະ ຄຳເວົ້າພຽງຢ່າງດຽວກໍສະແດງໃຫ້ເຫັນຄວາມຊົ່ວຊ້າທີ່ຝັງເລິກຢູ່ພາຍໃນພວກເຂົາແລ້ວ; ຄຳເວົ້າດັ່ງກ່າວແມ່ນເປັນຕາກຽດຊັງທີ່ສຸດ ແລະ ເປັນຕາລັງກຽດຫຼາຍ. ທຳມະຊາດຂອງຜູ້ຄົນດັ່ງກ່າວແມ່ນຕໍ່ຕ້ານພຣະເຈົ້າ. ບັນດາຜູ້ທີ່ເອົາໃຈໃສ່ໃນຄວາມເປັນຈິງແມ່ນຈະສື່ສານແຕ່ສິ່ງທີ່ຢູ່ໃນໃຈຂອງພວກເຂົາ ແລະ ເປີດອົກເປີດໃຈໃນການສົນທະນາ. ພວກເຂົາບໍ່ມີສ່ວນຮ່ວມໃນການປະຕິບັດຜິດໆແມ່ນແຕ່ຢ່າງດຽວ, ບໍ່ສະແດງທັງຄວາມບໍ່ສຸພາບ ຫຼື ການສົນທະນາທີ່ບໍ່ມີປະໂຫຍດ. ພວກເຂົາເປັນຄົນທີ່ກົງໄປກົງມາ ແລະ ບໍ່ປະຕິບັດຕາມກົດລະບຽບໃດໃນໂລກ. ບາງຄົນມີຄວາມຫຼົງໄຫຼສຳລັບການສະແດງຕົນສູ່ພາຍນອກ ຈົນເຖິງຈຸດທີ່ຂາດຄວາມສຳນຶກຢ່າງສິ້ນເຊີງ. ເມື່ອຄົນໜຶ່ງຮ້ອງເພງ, ພວກເຂົາກໍເລີ່ມຟ້ອນ ໂດຍທີ່ບໍ່ຮູ້ເລີຍວ່າ ເຂົ້າທີ່ຢູ່ໃນໝໍ້ຂອງພວກເຂົາແມ່ນຖືກໄຟໄໝ້ໝົດແລ້ວ. ຄົນເຊັ່ນນັ້ນເປັນຄົນບໍ່ນັບຖືພຣະເຈົ້າ ຫຼື ມີກຽດຫຍັງ ແລະ ພວກເຂົາກໍບໍ່ມີຄຸນຄ່າຫຍັງທັງສິ້ນ. ທັງໝົດນີ້ແມ່ນການສະແດງອອກເຖິງການຂາດຄວາມເປັນຈິງ. ເມື່ອບາງຄົນສົນທະນາກ່ຽວກັບບັນຫາຊີວິດຝ່າຍວິນຍານ, ເຖິງແມ່ນວ່າພວກເຂົາຈະບໍ່ໄດ້ເວົ້າເຖິງການເປັນໜີ້ຄຸນພຣະເຈົ້າກໍຕາມ, ພວກເຂົາກໍເກັບຄວາມຮັກອັນແທ້ຈິງທີ່ມີຕໍ່ພຣະອົງໄວ້ຢູ່ໃນສ່ວນເລິກ. ຄວາມຮູ້ສຶກເປັນໜີ້ບຸນຄຸນພຣະເຈົ້າຂອງເຈົ້າແມ່ນບໍ່ກ່ຽວຂ້ອງ

ຫຍັງກັບຄົນອື່ນເລີຍ; ເຈົ້າເປັນໜີ້ບຸນຄຸນພຣະເຈົ້າ, ບໍ່ແມ່ນເປັນໜີ້ບຸນຄຸນມະນຸດ. ມັນຈະມີປະໂຫຍດຫຍັງທີ່ເຈົ້າຕ້ອງເວົ້າເຖິງເລື່ອງນີ້ກັບຄົນອື່ນຢູ່ສະເໝີ? ເຈົ້າຕ້ອງໃຫ້ຄວາມສຳຄັນໃນການເຂົ້າຫາຄວາມເປັນຈິງ, ບໍ່ແມ່ນຄວາມກະຕືລືລົ້ນ ຫຼື ການສະແດງຕົນອອກຢູ່ພາຍນອກ. ການກະທຳທີ່ດີແຕ່ພຽງຜິວເຜີນຂອງມະນຸດສະແດງເຖິງຫຍັງ? ພວກມັນສະແດງເຖິງເນື້ອໜັງ ແລະ ແມ່ນແຕ່ການປະຕິບັດພາຍນອກທີ່ດີທີ່ສຸດກໍບໍ່ໄດ້ສະແດງເຖິງຊີວິດ; ພວກມັນພຽງແຕ່ສາມາດສະແດງເຖິງອາລົມສ່ວນຕົວຂອງເຈົ້າເອງເທົ່ານັ້ນ. ການປະຕິບັດພາຍນອກຂອງມະນຸດບໍ່ສາມາດບັນລຸຄວາມປາດຖະໜາຂອງພຣະເຈົ້າໄດ້. ເຈົ້າເວົ້າເຖິງການເປັນໜີ້ບຸນຄຸນພຣະເຈົ້າຂອງເຈົ້າຢູ່ເລື້ອຍໆ, ແຕ່ເຈົ້າບໍ່ສາມາດສະໜອງຊີວິດຂອງຄົນອື່ນ ຫຼື ດົນບັນດານໃຫ້ພວກເຂົາຮັກພຣະເຈົ້າ. ເຈົ້າເຊື່ອວ່າການກະທຳເຫຼົ່ານັ້ນຂອງເຈົ້າຈະເຮັດໃຫ້ພຣະເຈົ້າພໍໃຈບໍ? ເຈົ້າຮູ້ສຶກວ່າການກະທຳຂອງເຈົ້າສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ ແລະ ພວກມັນຄືຈິດວິນຍານ, ແຕ່ຄວາມຈິງແລ້ວ ພວກມັນລ້ວນແລ້ວແຕ່ບໍ່ມີເຫດຜົນ! ເຈົ້າເຊື່ອວ່າສິ່ງທີ່ເຮັດໃຫ້ເຈົ້າພໍໃຈ ແລະ ສິ່ງທີ່ເຈົ້າເຕັມໃຈຈະເຮັດເປັນສິ່ງທີ່ພຣະເຈົ້າປິຕິຍິນດີແທ້ໆ. ຄວາມມັກຂອງເຈົ້າສາມາດສະແດງເຖິງພຣະເຈົ້າໄດ້ບໍ? ລັກສະນະຂອງບຸກຄົນໜຶ່ງສາມາດສະແດງເຖິງພຣະເຈົ້າໄດ້ບໍ? ສິ່ງທີ່ເຮັດໃຫ້ເຈົ້າພໍໃຈເປັນສິ່ງທີ່ພຣະເຈົ້າກຽດຊັງແທ້ໆ ແລະ ນິໄສຂອງເຈົ້າກໍເປັນນິໄສທີ່ພຣະເຈົ້າກຽດຊັງ ແລະ ປະຕິເສດ. ຖ້າເຈົ້າຮູ້ສຶກເປັນໜີ້ບຸນຄຸນ, ກໍໃຫ້ໄປອະທິຖານຕໍ່ໜ້າພຣະເຈົ້າ; ບໍ່ຈຳເປັນຕ້ອງເວົ້າໃຫ້ຄົນອື່ນຟັງ. ຖ້າເຈົ້າບໍ່ອະທິຖານຕໍ່ໜ້າພຣະເຈົ້າ ແລະ ກົງກັນຂ້າມ ແມ່ນໄດ້ດຶງດູດຄວາມສົນໃຈມາໃຫ້ຕົນເອງຢູ່ເລື້ອຍໆເມື່ອຢູ່ຕໍ່ໜ້າຄົນອື່ນ, ສິ່ງນີ້ສາມາດຕອບສະໜອງຄວາມປະສົງຂອງພຣະເຈົ້າບໍ? ຖ້າການກະທຳຂອງເຈົ້າມີຢູ່ແຕ່ໃນຮູບລັກພາຍນອກເທົ່ານັ້ນຢູ່ສະເໝີ, ນີ້ກໍໝາຍຄວາມວ່າເຈົ້າໄຮ້ປະໂຫຍດທີ່ສຸດ. ມະນຸດທີ່ປະຕິບັດຄວາມດີທາງຜິວເຜີນເທົ່ານັ້ນ ແລະ ປາສະຈາກຄວາມເປັນຈິງແມ່ນມະນຸດປະເພດໃດ? ຄົນດັ່ງກ່າວແມ່ນພວກຟາຣີຊາຍ ແລະ ບຸກຄົນທາງສາສະໜາທີ່ໜ້າຊື່ໃຈຄົດເທົ່ານັ້ນ! ຖ້າພວກເຈົ້າບໍ່ປະຖິ້ມການປະຕິບັດພາຍນອກຂອງພວກເຈົ້າ ແລະ ບໍ່ສາມາດປ່ຽນແປງ, ແລ້ວອົງປະກອບຂອງຄວາມໜ້າຊື່ໃຈຄົດໃນພວກເຈົ້າກໍຈະໃຫຍ່ຂຶ້ນກວ່າເກົ່າ. ຍິ່ງອົງປະກອບຂອງຄວາມໜ້າຊື່ໃຈຄົດໃຫຍ່ຂຶ້ນສໍ່າໃດ, ມັນກໍຈະມີການຕໍ່ຕ້ານພຣະເຈົ້າຫຼາຍສໍ່ານັ້ນ. ໃນທີ່ສຸດແລ້ວ, ຄົນດັ່ງກ່າວກໍຈະຖືກກຳຈັດຢ່າງແນ່ນອນ.

# ຜູ້ທີ່ຮູ້ຈັກພາລະກິດຂອງພຣະເຈົ້າ ໃນປັດຈຸບັນເທົ່ານັ້ນຈຶ່ງອາດຮັບໃຊ້ພຣະເຈົ້າໄດ້

ໃນການເປັນພະຍານໃຫ້ກັບພຣະເຈົ້າ ແລະ ສ້າງຄວາມອັບອາຍໃຫ້ກັບມັງກອນແດງທີ່ຍິ່ງໃຫຍ່ ຄົນໆໜຶ່ງຕ້ອງມີຫຼັກການ ແລະ ຄົນໆໜຶ່ງຕ້ອງບັນລຸເງື່ອນໄຂໃດໜຶ່ງ: ຄົນໆໜຶ່ງຕ້ອງຮັກພຣະເຈົ້າໃນໃຈຂອງພວກເຂົາ ແລະ ເຂົ້າຫາພຣະທຳຂອງພຣະອົງ. ຖ້າເຈົ້າບໍ່ເຂົ້າສູ່ພຣະທຳຂອງພຣະເຈົ້າ ແລ້ວເຈົ້າກໍ່ບໍ່ມີທາງທີ່ຈະສ້າງຄວາມອັບອາຍໃຫ້ກັບຊາຕານໄດ້. ຕະຫຼອດການເຕີບໃຫຍ່ໃນຊີວິດຂອງພວກເຈົ້າ ພວກເຈົ້າປະຖິ້ມມັງກອນແດງທີ່ຍິ່ງໃຫຍ່ ແລະ ນຳຄວາມອັບອາຍຂາຍໜ້າທີ່ສຸດມາສູ່ມັນ. ມີພຽງສິ່ງນີ້ເທົ່ານັ້ນ ຈຶ່ງເປັນການເຮັດໃຫ້ມັງກອນແດງທີ່ຍິ່ງໃຫຍ່ໄດ້ຮັບຄວາມອັບອາຍຢ່າງແທ້ຈິງ. ຍິ່ງເຈົ້າເຕັມໃຈນຳເອົາພຣະທຳຂອງພຣະເຈົ້າໄປປະຕິບັດຫຼາຍສໍ່າໃດ ຍິ່ງເປັນການພິສູດເຖິງຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າ ແລະ ຄວາມກຽດຊັງທີ່ເຈົ້າມີຕໍ່ມັງກອນແດງທີ່ຍິ່ງໃຫຍ່ຫຼາຍສໍ່ານັ້ນ; ຍິ່ງເຈົ້າເຊື່ອຟັງພຣະທຳຂອງພຣະເຈົ້າຫຼາຍສໍ່າໃດ ກໍຍິ່ງເປັນການພິສູດເຖິງຄວາມສະແຫວງຫາຄວາມຈິງຂອງເຈົ້າຫຼາຍສໍ່ານັ້ນ. ຄົນທີ່ບໍ່ສະແຫວງຫາພຣະທຳຂອງພຣະເຈົ້າແມ່ນຄົນທີ່ປາສະຈາກຊີວິດ. ຄົນເຫຼົ່ານັ້ນແມ່ນຄົນທີ່ຢູ່ນອກພຣະທຳຂອງພຣະເຈົ້າ, ເປັນຄົນຂອງສາສະໜາ. ຄົນທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງມີຄວາມຮູ້ຢ່າງເລິກເຊິ່ງຫຼາຍຂຶ້ນກ່ຽວກັບພຣະທຳຂອງພຣະເຈົ້າ ໂດຍຜ່ານການກິນ ແລະ ດື່ມພຣະທຳຂອງພຣະອົງ. ຖ້າເຈົ້າບໍ່ສະແຫວງຫາພຣະທຳຂອງພຣະເຈົ້າ ແລ້ວເຈົ້າກໍບໍ່ສາມາດກິນ ແລະ ດື່ມພຣະທຳຂອງພຣະອົງຢ່າງແທ້ຈິງໄດ້ ແລະ ຖ້າເຈົ້າບໍ່ມີຄວາມຮູ້ໃນພຣະທຳຂອງພຣະເຈົ້າ ແລ້ວເຈົ້າກໍບໍ່ມີວິທີໃດທີ່ຈະເປັນພະຍານໃຫ້ກັບພຣະເຈົ້າ ຫຼື ເຮັດໃຫ້ພຣະເຈົ້າເພິ່ງພໍໃຈໄດ້.

ໃນການເຊື່ອພຣະເຈົ້າ ຄົນໆໜຶ່ງຄວນຮູ້ຈັກພຣະເຈົ້າແນວໃດ? ຄົນໜຶ່ງຄວນມາຮູ້ຈັກພຣະເຈົ້າໂດຍອີງໃສ່ພຣະທຳ ແລະ ພາລະກິດຂອງພຣະເຈົ້າໃນປັດຈຸບັນ ໂດຍບໍ່ມີຄວາມບ່ຽງເບນ ຫຼື ມີຄວາມເຊື່ອທີ່ບໍ່ຖືກຕ້ອງ ແລະ ກ່ອນອື່ນໝົດ ຄົນໆໜຶ່ງຄວນຮູ້ຈັກພາລະກິດຂອງພຣະເຈົ້າ. ນີ້ຄືພື້ນຖານຂອງການຮູ້ຈັກພຣະເຈົ້າ. ທຸກຄວາມເຊື່ອທີ່ຫຼາກຫຼາຍ ແລະ ບໍ່ຖືກຕ້ອງເຫຼົ່ານັ້ນທີ່ຂາດຄວາມເຂົ້າໃຈກ່ຽວກັບພຣະທຳທີ່ບໍລິສຸດຂອງພຣະເຈົ້າແມ່ນແນວຄວາມຄິດທາງສາສະໜາ ເຊິ່ງເປັນຄວາມເຂົ້າໃຈທີ່ຜິດພ້ຽນ ແລະ ບໍ່ຖືກຕ້ອງ. ທັກສະທີ່ຍິ່ງໃຫຍ່ທີ່ສຸດຂອງບຸກຄົນທາງສາສະໜາຄືການນຳເອົາພຣະທຳຂອງພຣະເຈົ້າທີ່ຖືກເຂົ້າໃຈໃນອະດີດ ແລ້ວວັດແທກຂໍ້ພຣະທຳນັ້ນໂດຍອີງໃສ່ພຣະທຳຂອງພຣະເຈົ້າໃນປັດຈຸບັນ. ເມື່ອເວລາຮັບໃຊ້ພຣະເຈົ້າໃນປັດຈຸບັນ ຖ້າເຈົ້າຢຶດຕິດກັບສິ່ງທີ່ພຣະວິນຍານບໍລິສຸດໄດ້ເປີດເຜີຍໂດຍແສງສະຫວ່າງຂອງພຣະອົງໃນອະດີດ ແລ້ວການຮັບໃຊ້ຂອງເຈົ້າຈະເກີດມີການຂັດຂວາງ ແລະ ການປະຕິບັດຂອງເຈົ້າກໍຈະຫຼ້າສະໄໝ ເຊິ່ງເປັນພຽງພິທີກຳທາງສາສະໜາ. ຖ້າເຈົ້າເຊື່ອວ່າຄົນເຫຼົ່ານັ້ນທີ່ຮັບໃຊ້ພຣະເຈົ້າຕ້ອງຖ່ອມຕົວ ແລະ ອົດທົນຢູ່ພາຍນອກ... ທ່າມກາງຄຸນສົມບັດອື່ນໆ ແລະ ຖ້າເຈົ້ານຳຄວາມຮູ້ປະເພດນີ້ໄປປະຕິບັດໃນປັດຈຸບັນ ແລ້ວຄວາມຮູ້ດັ່ງກ່າວກໍເປັນແນວຄວາມຄິດທາງສາສະໜາ; ການປະຕິບັດດັ່ງກ່າວກໍກາຍມາເປັນການປະຕິບັດຂອງຄົນໜ້າຊື່ໃຈຄົດ. ປະໂຫຍກ

"ແນວຄວາມຄິດທາງສາສະໜາ" ໝາຍເຖິງສິ່ງທີ່ຫຼ້າສະໄໝ ແລະ ເຊົາໃຊ້ກັນແລ້ວ (ລວມທັງການເຂົ້າໃຈພຣະທຳທີ່ພຣະເຈົ້າໄດ້ກ່າວໄວ້ກ່ອນໜ້ານີ້ ແລະ ແສງສະຫວ່າງທີ່ພຣະວິນຍານບໍລິສຸດໄດ້ເປີດເຜີຍໂດຍກົງ) ແລະ ຖ້ານຳເອົາພຣະທຳດັ່ງກ່າວໄປປະຕິບັດໃນປັດຈຸບັນ, ພຣະທຳນັ້ນກໍຈະຂັດຂວາງພາລະກິດຂອງພຣະເຈົ້າ ແລະ ບໍ່ມີປະໂຫຍດຫຍັງກັບມະນຸດເລີຍ. ຖ້າຜູ້ຄົນບໍ່ສາມາດລຶບລ້າງສິ່ງເຫຼົ່ານັ້ນອອກຈາກຕົວພວກເຂົາ ທີ່ເປັນແນວຄວາມຄິດທາງສາສະໜາ ແລ້ວສິ່ງເຫຼົ່ານີ້ກໍຈະກາຍມາເປັນອຸປະສັກໃນການຮັບໃຊ້ພຣະເຈົ້າຂອງພວກເຂົາ. ຄົນທີ່ມີແນວຄວາມຄິດທາງສາສະໜາບໍ່ມີທາງນຳທັນບາດກ້າວຂອງພາລະກິດຂອງພຣະວິນຍານບໍລິສຸດໄດ້, ພວກເຂົາລ້າຊ້າໃນໜຶ່ງບາດກ້າວ, ຈາກນັ້ນກໍ່ເປັນສອງບາດກ້າວ. ນີ້ກໍ່ຍ້ອນວ່າ ແນວຄວາມຄິດທາງສາສະໜາເຫຼົ່ານີ້ເຮັດໃຫ້ມະນຸດຄິດວ່າ ຕົນເອງທ່ຽງທຳຢ່າງຍິ່ງ ແລະ ອວດດີ. ພຣະເຈົ້າບໍ່ໄດ້ຮູ້ສຶກອາໄລອາວອນໃນສິ່ງທີ່ພຣະອົງໄດ້ກ່າວ ແລະ ກະທຳໃນອະດີດ; ຖ້າບາງສິ່ງຫຼ້າສະໄໝແລ້ວ ພຣະອົງກໍທຳລາຍມັນຖິ້ມ. ເຈົ້າບໍ່ສາມາດປະຖິ້ມແນວຄວາມຄິດຂອງເຈົ້າແທ້ໆບໍ? ຖ້າເຈົ້າຍຶດຕິດກັບພຣະທຳທີ່ພຣະເຈົ້າກ່າວໃນອະດີດ ສິ່ງນີ້ຈະພິສູດໄດ້ບໍວ່າ ເຈົ້າຮູ້ຈັກພາລະກິດຂອງພຣະເຈົ້າ? ຖ້າເຈົ້າບໍ່ສາມາດຍອມຮັບແສງສະຫວ່າງຂອງພຣະວິນຍານບໍລິສຸດໃນປັດຈຸບັນ ແຕ່ຍຶດຕິດກັບແສງສະຫວ່າງໃນອະດີດ ສິ່ງນີ້ສາມາດພິສູດໄດ້ບໍວ່າ ເຈົ້າເດີນຕາມບາດກ້າວຂອງພຣະເຈົ້າ? ເຈົ້າຍັງບໍ່ສາມາດປະຖິ້ມແນວຄວາມຄິດທາງສາສະໜາບໍ? ຖ້າເປັນເຊັ່ນນັ້ນ ເຈົ້າກໍຈະກາຍເປັນຄົນທີ່ຕໍ່ຕ້ານພຣະເຈົ້າ.

ຖ້າຜູ້ຄົນສາມາດປະຖິ້ມແນວຄວາມຄິດທາງສາສະໜາ, ພວກເຂົາຈະບໍ່ນຳໃຊ້ຄວາມຄິດຂອງຕົນເອງເພື່ອປະເມີນພຣະທຳ ແລະ ພາລະກິດຂອງພຣະເຈົ້າໃນປັດຈຸບັນ ແຕ່ຈະເຊື່ອຟັງໂດຍກົງ. ເຖິງແມ່ນວ່າ ພາລະກິດຂອງພຣະເຈົ້າໃນປັດຈຸບັນບໍ່ຄືກັບພາລະກິດໃນອະດີດຢ່າງຊັດເຈນ, ແຕ່ເຈົ້າກໍ່ຍັງສາມາດປະຖິ້ມຄວາມຄິດເຫັນໃນອະດີດ ແລະ ເຊື່ອຟັງພາລະກິດຂອງພຣະເຈົ້າໃນປັດຈຸບັນໄດ້ໂດຍກົງ. ຖ້າເຈົ້າສາມາດເຂົ້າໃຈວ່າເຈົ້າຕ້ອງມີຄວາມພາກພູມໃຈຕໍ່ພາລະກິດຂອງພຣະເຈົ້າໃນປັດຈຸບັນ ໂດຍບໍ່ສົນໃຈວ່າພຣະເຈົ້າປະຕິບັດພາລະກິດໃນອະດີດແນວໃດ, ເຈົ້າກໍເປັນຄົນທີ່ປະຖິ້ມແນວຄວາມຄິດຂອງຕົນແລ້ວ, ເປັນຄົນທີ່ເຊື່ອຟັງພຣະເຈົ້າ ແລະ ເປັນຄົນທີ່ສາມາດເຊື່ອຟັງພາລະກິດ ແລະ ພຣະທຳຂອງພຣະເຈົ້າ ແລະ ເດີນຕາມບາດກ້າວຂອງພຣະອົງ. ດ້ວຍວິທີນີ້ ເຈົ້າຈະເປັນຄົນທີ່ເຊື່ອຟັງພຣະເຈົ້າຢ່າງແທ້ຈິງ. ເຈົ້າບໍ່ໄດ້ວິເຄາະ ຫຼື ກວດສອບພາລະກິດຂອງພຣະເຈົ້າ. ໃນເມື່ອພຣະເຈົ້າໄດ້ລືມພາລະກິດໃນອະດີດຂອງພຣະອົງ ເຈົ້າກໍໄດ້ລືມມັນເຊັ່ນດຽວກັນ. ປັດຈຸບັນຄືປັດຈຸບັນ ແລະ ອະດີດກໍຄືອະດີດ ແລະ ນັບແຕ່ມື້ນີ້ໄປພຣະເຈົ້າໄດ້ປ່ອຍປະສິ່ງທີ່ພຣະອົງກະທຳໃນອະດີດແລ້ວ ເຈົ້າກໍບໍ່ຄວນຍຶດຕິດຢູ່ກັບມັນ. ເມື່ອເຈົ້າບໍ່ຍຶດຕິດກັບມັນມີພຽງແຕ່ຄົນແບບນັ້ນທີ່ເປັນຄົນທີ່ເຊື່ອຟັງພຣະເຈົ້າຢ່າງສົມບູນ ແລະ ປະຖິ້ມແນວຄວາມຄິດທາງສາສະໜາຂອງຕົນຢ່າງສົມບູນ.

ຍ້ອນວ່າພາລະກິດຂອງພຣະເຈົ້າມີການພັດທະນາໃໝ່ຢູ່ເປັນປະຈຳ, ຈຶ່ງມີພາລະກິດທີ່ຫຼ້າສະໄໝ ແລະ ເກົ່າ ໃນຂະນະທີ່ພາລະກິດໃໝ່ເກີດຂຶ້ນ. ພາລະກິດປະເພດຕ່າງໆເຫຼົ່ານີ້, ທັງເກົ່າ ແລະ ໃໝ່ບໍ່ໄດ້ຂັດແຍ້ງກັນ ແຕ່ເກື້ອກູນກັນ; ທຸກບາດກ້າວຂອງພາລະກິດດັ່ງກ່າວແມ່ນສືບຕໍ່ຈົນຮອດຍຸກສຸດທ້າຍ.

ຍ້ອນມີພາລະກິດໃໝ່, ສິ່ງເກົ່າໆ ແນ່ນອນ ກໍຕ້ອງໄດ້ທຳລາຍຖິ້ມ. ຕົວຢ່າງ: ການປະຕິບັດບາງຢ່າງທີ່ຖືກຈັດຕັ້ງເປັນເວລາດົນນານ ແລະ ຖ້ອຍຄຳທີ່ເປັນນິໄສຂອງມະນຸດ ປະກອບດ້ວຍປະສົບການ ແລະ ການສັ່ງສອນເປັນເວລາຫຼາຍປີຂອງມະນຸດ ໄດ້ສ້າງແນວຄວາມຄິດທຸກປະເພດ ແລະ ທຸກຮູບແບບໃນຈິດໃຈຂອງມະນຸດ. ທີ່ພຣະເຈົ້າຍັງບໍ່ເປີດເຜີຍໃບໜ້າທີ່ແທ້ຈິງຂອງພຣະອົງ ແລະ ຈິດໃຈໂດຍທຳມະຊາດໃຫ້ມະນຸດໄດ້ເຫັນຢ່າງສົມບູນ ຄຽງຄູ່ກັບການແຜ່ຂະຫຍາຍຂອງທິດສະດີຕາມປະເພນີຕັ້ງແຕ່ສະໄໝບູຮານມາເປັນເວລາຫຼາຍປີນັ້ນ ແມ່ນເປັນປະໂຫຍດຫຼາຍຕໍ່ການສ້າງແນວຄິດດັ່ງກ່າວຂອງມະນຸດ. ອາດເວົ້າໄດ້ວ່າ ຕະຫຼອດເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າຂອງມະນຸດ ໄດ້ມີອິດທິພົນແຫ່ງແນວຄິດທີ່ຫຼາກຫຼາຍເກີດຂຶ້ນ ແລະ ເກີດວິວັດທະນາການແຫ່ງຄວາມເຂົ້າໃຈຕາມແນວຄິດທຸກປະເພດກ່ຽວກັບພຣະເຈົ້າໃນຜູ້ຄົນ ເຊິ່ງເຮັດໃຫ້ຜູ້ຄົນທາງສາສະໜາຫຼາຍຄົນທີ່ຮັບໃຊ້ພຣະເຈົ້າກາຍມາເປັນສັດຕູຂອງພຣະອົງ. ດັ່ງນັ້ນ ຍິ່ງແນວຄວາມຄິດທາງສາສະໜາຂອງຄົນໜັກແໜ້ນຂຶ້ນຫຼາຍເທົ່າໃດ ພວກເຂົາກໍຈະກາຍເປັນສັດຕູ ແລະ ຕໍ່ຕ້ານພຣະເຈົ້າຫຼາຍເທົ່ານັ້ນ. ພາລະກິດຂອງພຣະເຈົ້າແມ່ນໃໝ່ຢູ່ສະເໝີ, ບໍ່ເຄີຍເກົ່າ ແລະ ບໍ່ເຄີຍສ້າງທິດສະດີ ກົງກັນຂ້າມ ພາລະກິດດັ່ງກ່າວໄດ້ປ່ຽນແປງຢ່າງຕໍ່ເນື່ອງ ແລະ ຖືກເລີ່ມຕົ້ນໃໝ່ໃນຂອບເຂດທັງນ້ອຍ ແລະ ກວ້າງກວ່າເກົ່າ. ການປະຕິບັດພາລະກິດໃນລັກສະນະນີ້ແມ່ນເປັນການສະແດງອອກເຖິງອຸປະນິໄສໂດຍທຳມະຊາດຂອງພຣະເຈົ້າເອງ. ມັນຍັງແມ່ນຫຼັກການໂດຍທຳມະຊາດຂອງພາລະກິດຂອງພຣະເຈົ້າ ແລະ ໜຶ່ງໃນວິທີທີ່ພຣະເຈົ້າເຮັດໃຫ້ການຄຸ້ມຄອງຂອງພຣະອົງບັນລຸການຄຸ້ມຄອງຂອງພຣະອົງ. ຖ້າພຣະອົງບໍ່ປະຕິບັດພາລະກິດດ້ວຍວິທີນີ້ ມະນຸດຈະບໍ່ປ່ຽນແປງ ຫຼື ສາມາດຮູ້ຈັກພຣະເຈົ້າໄດ້ ແລະ ຊາຕານກໍຈະບໍ່ປະລາໄຊ. ດ້ວຍເຫດນີ້ ພາລະກິດຂອງພຣະອົງຈຶ່ງມີການປ່ຽນແປງເກີດຂຶ້ນຢ່າງຕໍ່ເນື່ອງ ເຊິ່ງເບິ່ງຄືວ່າບໍ່ເປັນປົກກະຕິ ແຕ່ແທ້ຈິງແລ້ວ ແມ່ນເປັນປົກກະຕິດີ. ເຖິງຢ່າງໃດກໍຕາມ ວິທີທີ່ມະນຸດເຊື່ອໃນພຣະເຈົ້າແຕກຕ່າງກັນຜິດສົມຄວນ. ເຂົາຍຶດຕິດກັບທິດສະດີ ແລະ ລະບົບເກົ່າແກ່ທີ່ຕົນລື້ງເຄີຍ ແລະ ຍິ່ງສິ່ງເຫຼົ່ານັ້ນເກົ່າຫຼາຍສໍ່າໃດ ຍິ່ງຖືກໃຈເຂົາຫຼາຍສໍ່ານັ້ນ. ຄວາມຄິດທີ່ໂງ່ຈ້າຂອງມະນຸດ, ຈິດໃຈເໝືອນດັ່ງກ້ອນຫີນທີ່ບໍ່ຍອມອ່ອນນ້ອມ ຈະສາມາດຍອມຮັບພາລະກິດ ແລະ ພຣະທຳໃໝ່ຂອງພຣະເຈົ້າຢ່າງເລິກເຊິ່ງໄດ້ແນວໃດ? ມະນຸດມັກຈະກຽດຊັງພຣະເຈົ້າທີ່ໃໝ່ ແລະ ບໍ່ເຄີຍເກົ່າສະເໝີ; ເຂົາພຽງແຕ່ມັກພຣະເຈົ້າອົງເດີມ, ຜູ້ທີ່ມີແຂ້ວຍາວ, ຜົມສີຂາວ ແລະ ຢູ່ກັບທີ່. ເພາະສະນັ້ນ, ຍ້ອນວ່າ ພຣະເຈົ້າ ແລະ ມະນຸດມີຄວາມມັກສ່ວນຕົວທີ່ແຕກຕ່າງກັນ, ມະນຸດຈຶ່ງໄດ້ກາຍເປັນສັດຕູຂອງພຣະເຈົ້າ. ຂໍ້ຂັດແຍ້ງຕ່າງໆເຫຼົ່ານີ້ມີມາຕັ້ງແຕ່ພຣະເຈົ້າເລີ່ມປະຕິບັດພາລະກິດໃໝ່ຂອງພຣະອົງໄດ້ເກືອບຫົກພັນປີ ແລະ ໃນປັດຈຸບັນນີ້ຂໍ້ຂັດແຍ້ງດັ່ງກ່າວກໍຍັງມີຢູ່. ມະນຸດແມ່ນເກີນທີ່ຈະໄດ້ຮັບການແກ້ໄຂແລ້ວ. ບາງເທື່ອ ເປັນຍ້ອນຄວາມດື້ດ້ານຂອງມະນຸດ ຫຼື ເປັນຍ້ອນຂໍ້ບັນຍັດການຈັດການຂອງພຣະເຈົ້າທີ່ມະນຸດບໍ່ສາມາດຝ່າຝືນໄດ້ ທີ່ເປັນຕົ້ນເຫດເຮັດໃຫ້ຄູສອນສາດສະໜາ ແລະ ຜູ້ຍິງເຫຼົ່ານັ້ນຍັງຍຶດຕິດກັບໜັງສື ແລະ ປຶ້ມເກົ່າແກ່ທີ່ຂາດຄຸນນະພາບ, ໃນຂະນະທີ່ພຣະເຈົ້າສືບຕໍ່ປະຕິບັດພາລະກິດການຄຸ້ມຄອງຂອງພຣະອົງທີ່ຍັງບໍ່ສຳເລັດນັ້ນ ເບິ່ງຄືວ່າບໍ່ມີໃຜຢູ່ຄຽງຂ້າງພຣະອົງເລີຍ. ເຖິງແມ່ນຂໍ້ຂັດແຍ້ງເຫຼົ່ານີ້ເຮັດໃຫ້ມະນຸດເປັນສັດຕູກັບ

ພຣະເຈົ້າ ແລະ ເຖິງແມ່ນວ່າ ຂໍ້ຂັດແຍ້ງດັ່ງກ່າວຈະບໍ່ສາມາດແກ້ໄຂໄດ້ ພຣະເຈົ້າກໍບໍ່ໃສ່ໃຈໃນສິ່ງເຫຼົ່ານັ້ນ, ພຣະອົງບໍ່ສົນໃຈຂໍ້ຂັດແຍ້ງໃດໆທັງສິ້ນ ບໍ່ວ່າຈະມີ ຫຼື ບໍ່ມີ. ເຖິງຢ່າງໃດກໍຕາມ ມະນຸດຍັງຍຶດຖືໃນຄວາມເຊື່ອ ແລະ ແນວຄວາມຄິດຂອງພວກເຂົາ ແລະ ບໍ່ເຄີຍປະຖິ້ມຄວາມເຊື່ອ ແລະ ແນວຄວາມຄິດນັ້ນເລີຍ. ແຕ່ມີສິ່ງໜຶ່ງທີ່ພິສູດໃຫ້ເຫັນຢ່າງຊັດເຈນກໍຄື: ເຖິງແມ່ນວ່າ ມະນຸດຈະບໍ່ຜິດພ້ຽນໄປຈາກຈຸດຢືນຂອງຕົນ, ແຕ່ບາດກ້າວຂອງພຣະເຈົ້າແມ່ນເຄື່ອນຍ້າຍເປັນປະຈຳ ແລະ ພຣະອົງປ່ຽນແປງທ່າທີຂອງພຣະອົງຕາມສະພາບແວດລ້ອມຢູ່ສະເໝີ. ໃນທີ່ສຸດກໍຈະແມ່ນມະນຸດເອງທີ່ໄດ້ຮັບການພ່າຍແພ້ໂດຍບໍ່ມີການຕໍ່ສູ້. ໃນຂະນະດຽວກັນ ພຣະເຈົ້າແມ່ນສັດຕູຍິ່ງໃຫຍ່ທີ່ສຸດຂອງບັນດາສັດຕູຂອງພຣະອົງທີ່ໄດ້ຖືກເອົາຊະນະ ແລະ ພຣະອົງຍັງເປັນຜູ້ຊະນະເລີດຂອງມະນຸດຊາດທັງປວງໄດ້ຖືກເອົາຊະນະ ແລະ ຜູ້ທີ່ບໍ່ໄດ້ຖືກເອົາຊະນະອີກດ້ວຍ. ມີຜູ້ໃດແດ່ທີ່ສາມາດແຂ່ງຂັນກັບພຣະເຈົ້າ ແລະ ໄດ້ຮັບໄຊຊະນະ? ແນວຄວາມຄິດຂອງມະນຸດອາດເບິ່ງຄືວ່າ ມາຈາກພຣະເຈົ້າ ຍ້ອນວ່າ ພວກເຂົາຫຼາຍຄົນເກີດຈາກການລຸກຕື່ນຂຶ້ນຂອງພາລະກິດຂອງພຣະເຈົ້າ. ເຖິງຢ່າງໃດກໍ່ຕາມ, ພຣະເຈົ້າບໍ່ໄດ້ໃຫ້ອະໄພມະນຸດຍ້ອນສິ່ງນີ້, ຍິ່ງໄປກວ່ານັ້ນ ພຣະອົງຍັງບໍ່ຍົກຍ້ອງມະນຸດທີ່ປະຕິບັດພາລະກິດ "ເພື່ອພຣະເຈົ້າ" ໃນການຕື່ນຂຶ້ນຂອງພາລະກິດຂອງພຣະເຈົ້າເຊິ່ງຢູ່ນອກພາລະກິດຂອງພຣະອົງ. ກົງກັນຂ້າມພຣະອົງຮູ້ສຶກລັງກຽດແນວຄວາມຄິດຂອງມະນຸດ ແລະ ຄວາມເຊື່ອທີ່ເກົ່າ ແລະ ບໍ່ມີແມ່ນແຕ່ຄວາມຄິດທີ່ຈະຮັບຮູ້ວັນທີທີ່ແນວຄິດເຫຼົ່ານີ້ປາກົດຂຶ້ນເປັນຄັ້ງທຳອິດ. ພຣະອົງບໍ່ຍອມຮັບເລີຍວ່າ ແນວຄວາມຄິດເຫຼົ່ານີ້ເກີດມາຈາກພາລະກິດຂອງພຣະອົງ ຍ້ອນແນວຄວາມຄິດຂອງມະນຸດແຜ່ຂະຫຍາຍໂດຍມະນຸດ; ແຫຼ່ງກຳເນີດຂອງພວກມັນແມ່ນມາຈາກຄວາມຄິດ ແລະ ຈິດໃຈຂອງມະນຸດເອງ ແລະ ບໍ່ແມ່ນມາຈາກພຣະເຈົ້າ ແຕ່ມາຈາກຊາຕານ. ຄວາມປະສົງຂອງພຣະເຈົ້າກໍຄືການເຮັດໃຫ້ພາລະກິດຂອງພຣະອົງໃໝ່ ແລະ ມີຊີວິດຊີວາຢູ່ສະເໝີ ບໍ່ແມ່ນແກ່ເຖົ້າ ແລະ ບໍ່ມີຊີວິດຊີວາ ແລະ ສິ່ງທີ່ພຣະອົງໃຫ້ມະນຸດມະນຸດຍຶດຖືນັ້ນແປຜັນຕາມແຕ່ລະຍຸກ ແລະ ແຕ່ລະສະໄໝ, ບໍ່ເປັນນິດນິລັນ ແລະ ບໍ່ເປັນອຳມະຕະ. ນີ້ກໍຍ້ອນວ່າ ພຣະອົງແມ່ນພຣະເຈົ້າ ຜູ້ສ້າງມະນຸດໃຫ້ມີຊີວິດ ແລະ ເປັນຄົນໃໝ່ ເຊິ່ງກົງກັນຂ້າມກັບມານຮ້າຍຜູ້ທີ່ເຮັດໃຫ້ມະນຸດຕາຍ ແລະ ເປັນຄົນເກົ່າ. ພວກເຈົ້າຍັງບໍ່ເຂົ້າໃຈໃນສິ່ງນີ້ບໍ? ເຈົ້າມີແນວຄວາມຄິດກ່ຽວກັບພຣະເຈົ້າ ແລະ ບໍ່ສາມາດປະຖິ້ມຄວາມຄິດດັ່ງກ່າວນັ້ນໄດ້ ກໍຍ້ອນເຈົ້າມີຄວາມຄິດຄັບແຄບ. ບໍ່ແມ່ນເປັນຍ້ອນເຫດຜົນທີ່ວ່າ ພາລະກິດຂອງພຣະເຈົ້າເລັກນ້ອຍເກີນໄປ ຫຼື ຍ້ອນພາລະກິດຂອງພຣະເຈົ້ານັ້ນແຕກຕ່າງຈາກຄວາມຕ້ອງການຂອງມະນຸດ ຫຼື ຍິ່ງໄປກວ່ານັ້ນມັນບໍ່ແມ່ນເປັນຍ້ອນພຣະເຈົ້າບໍ່ໄດ້ເອົາໃຈໃສ່ໃນໜ້າທີ່ຂອງພຣະອົງ. ເຈົ້າບໍ່ສາມາດປະຖິ້ມແນວຄວາມຄິດຂອງເຈົ້າກໍຍ້ອນວ່າ ເຈົ້າຂາດຄວາມເຊື່ອຟັງຫຼາຍເກີນໄປ ແລະ ຍ້ອນເຈົ້າບໍ່ມີລັກສະນະທີ່ຄ້າຍຄືກັບສິ່ງມີຊີວິດແມ່ນແຕ່ໜ້ອຍດຽວ ແລະ ບໍ່ແມ່ນຍ້ອນພຣະເຈົ້າເຮັດໃຫ້ທຸກສິ່ງຢ່າງຫຍຸ້ງຍາກໄປໝົດສຳລັບເຈົ້າ. ເຈົ້າເປັນສາເຫດຂອງສິ່ງທັງໝົດນີ້ ແລະ ມັນບໍ່ກ່ຽວຂ້ອງຫຍັງເລີຍກັບພຣະເຈົ້າ; ຄວາມທົນທຸກທໍລະມານ ແລະ ຄວາມໂຊກຮ້າຍແມ່ນຖືກສ້າຂຶ້ນໂດຍມະນຸດ. ຄວາມຄິດຂອງພຣະເຈົ້າແມ່ນດີສະເໝີ: ພຣະອົງບໍ່ຕ້ອງການໃຫ້ເຈົ້າມີແນວຄວາມຄິດຕ່າງໆນາໆ ແຕ່ຕ້ອງການໃຫ້ເຈົ້າປ່ຽນແປງ

ແລະ ຖືກສ້າງໃໝ່ຕາມຍຸກສະໄໝຂອງທີ່ຜ່ານພົ້ນໄປ. ແຕ່ເຈົ້າບໍ່ຮູ້ວ່າສິ່ງໃດດີສຳລັບເຈົ້າ ແລະ ມີແຕ່ກວດສອບ ຫຼື ວິເຄາະຢູ່ເປັນປະຈຳ. ມັນບໍ່ແມ່ນວ່າ ພຣະເຈົ້າເຮັດໃຫ້ທຸກສິ່ງຫຍຸ້ງຍາກໄປສຳລັບເຈົ້າ ແຕ່ເຈົ້າບໍ່ມີຄວາມເຄົາລົບຕໍ່ພຣະເຈົ້າ ແລະ ຄວາມບໍ່ເຊື່ອຟັງຂອງເຈົ້ານັ້ນຍິ່ງໃຫຍ່ເກີນໄປ. ສິ່ງທີ່ມີຊີວິດນ້ອຍໆຄືພວກເຈົ້າຍັງກ້າຮັບເອົາສິ່ງເລັກໆນ້ອຍໆທີ່ພຣະເຈົ້າມອບໃຫ້ພວກເຈົ້າກ່ອນໜ້ານີ້ ແລ້ວຫັນກັບມາ ແລະ ໃຊ້ມັນໂຈມຕີພຣະເຈົ້າ, ນີ້ບໍ່ແມ່ນຄວາມບໍ່ເຊື່ອຟັງຂອງມະນຸດບໍ? ມັນຖືກຕ້ອງແລ້ວທີ່ຈະເວົ້າວ່າ ມະນຸດບໍ່ມີຄຸນສົມບັດແທ້ໆໃນການສະແດງຄວາມຄິດເຫັນຂອງພວກເຂົາຕໍ່ໜ້າພຣະເຈົ້າ ແລະ ແຮງໄກທີ່ພວກເຂົາຈະມມີຄຸນສົມບັດທີ່ຈະແຫ່ຂະບວນອ້ອມພາສາທີ່ໄຮ້ຄ່າ, ມີກິ່ນເໝັນ, ເນົ່າເປື່ອຍ, ສວຍງາມຂອງພວກເຂົາ ຕາມທີ່ພວກເຂົາປາຖະໜາ, ບໍ່ຕ້ອງເວົ້າຫຍັງເຖິງເລື່ອງຫຍັງກໍຕາມທີ່ເປັນແນວຄິດເປິເປື້ອນເຫຼົ່ານັ້ນ. ແລ້ວພວກເຂົາບໍ່ແມ່ນໄຮ້ຄ່າຫຼາຍກວ່ານັ້ນອີກບໍ?

ບາງຄົນທີ່ຮັບໃຊ້ພຣະເຈົ້າແທ້ໆແມ່ນຄົນທີ່ປະຕິບັດຕາມໃຈຂອງພຣະເຈົ້າ ແລະ ເປັນຄົນທີ່ເໝາະສົມໃຫ້ພຣະເຈົ້ານຳໃຊ້ ແລະ ເປັນຄົນທີ່ສາມາດປະຖິ້ມແນວຄວາມຄິດທາງສາສະໜາໄດ້. ຖ້າເຈົ້າປາຖະໜາທີ່ຈະກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃຫ້ມີປະສິດທິພາບ, ເຈົ້າຕ້ອງປະຖິ້ມແນວຄວາມຄິດທາງສາສະໜາຂອງເຈົ້າ. ຖ້າເຈົ້າຖາປະຖໜາທີ່ຈະຮັບໃຊ້ພຣະເຈົ້າ, ກ່ອນອື່ນເຈົ້າຕ້ອງປະຖິ້ມແນວຄິດທາງສາສະໜານັ້ນກ່ອນ ແລະ ເຊື່ອຟັງພຣະທຳຂອງພຣະເຈົ້າໃນທຸກໆສິ່ງ. ນີ້ແມ່ນສິ່ງທີ່ຄົນຮັບໃຊ້ພຣະເຈົ້າຄວນມີ. ຖ້າເຈົ້າປາສະຈາກຄວາມຮູ້ນີ້ແລ້ວ ແລ້ວໃນເວລາເຈົ້າເລີ່ມຕົ້ນຮັບໃຊ້ພຣະເຈົ້າ, ເຈົ້າຈະກໍ່ໃຫ້ເກີດສິ່ງຂັດຂວາງ, ສິ່ງລົບກວນ ແລະ ຖ້າເຈົ້າຕັ້ງໝັ້ນໃນແນວຄວາມຄິດຂອງເຈົ້າ, ເຈົ້າກໍຈະຖືກພຣະເຈົ້າລົ້ມເຈົ້າລົງຢ່າງບໍ່ສາມາດຫຼີກເວັ້ນໄດ້ ແລະ ເຈົ້າຈະບໍ່ສາມາດລຸກຂຶ້ນໄດ້ອີກ. ຈົ່ງເອົາປັດຈຸບັນເປັນຕົວຢ່າງ. ຖ້ອຍຄຳຫຼາຍຄຳ ແລະ ພາລະກິດໃນປັດຈຸບັນນີ້ແມ່ນບໍ່ຖືກກັນກັບພຣະຄຳພີ ແລະ ບໍ່ຖືກກັນກັບພາລະກິດທີ່ພຣະເຈົ້າໄດ້ປະຕິບັດກ່ອນໜ້ານີ້ ແລະ ຖ້າເຈົ້າບໍ່ມີຄວາມຕ້ອງການທີ່ຈະເຊື່ອຟັງ ແລ້ວເຈົ້າອາດຈະລົ້ມລົງໄດ້ທຸກເວລາ. ຖ້າເຈົ້າຕ້ອງການຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າ, ເຈົ້າຕ້ອງປະຖິ້ມແນວຄວາມຄິດທາງສາສະໜານັ້ນກ່ອນ ແລະ ແກ້ໄຂທັດສະນະຂອງເຈົ້າເອງໃຫ້ຖືກຕ້ອງ. ຫຼາຍສິ່ງທີ່ຈຸຖືກກ່າວເຖິງ ຈະບໍ່ຄືກັນກັບສິ່ງທີ່ກ່າວໄວ້ໃນອະດີດ ແລະ ຖ້າເຈົ້າປາສະຈາກຄວາມໃຝ່ຫາທີ່ຈະເຊື່ອຟັງ ເຈົ້າຈະບໍ່ສາມາດຍ່າງຕາມເສັ້ນທາງທີ່ຢູ່ຂ້າງໜ້າໄດ້. ຖ້າວິທີການປະຕິບັດພາລະກິດໃດໜຶ່ງຂອງພຣະເຈົ້າໄດ້ຝັງເລິກເຂົ້າໃນເຈົ້າ ແລະ ເຈົ້າບໍ່ຍອມປະຖິ້ມມັນຈັກເທື່ອ, ວິທີການດັ່ງກ່າວກໍຈະກາຍເປັນແນວຄວາມຄິດທາງສາສະໜາຂອງເຈົ້າ. ຖ້າສິ່ງທີ່ພຣະເຈົ້າເປັນ ໄດ້ຝັງເລິກເຂົ້າໃນຕົວເຈົ້າ ແລ້ວເຈົ້າໄດ້ຮັບຄວາມຈິງ ແລະ ຖ້າພຣະທຳ ແລະ ຄວາມຈິງຂອງພຣະເຈົ້າສາມາດກາຍເປັນຊີວິດຂອງເຈົ້າ, ເຈົ້າກໍຈະບໍ່ມີແນວຄວາມຄິດຕ່າງໆນາໆກ່ຽວກັບພຣະເຈົ້າອີກຕໍ່ໄປ. ຜູ້ຄົນທີ່ມີຄວາມຮູ້ຢ່າງແທ້ຈິງກ່ຽວກັບພຣະເຈົ້າຈະບໍ່ມີແນວຄວາມຄິດ ແລະ ຍຶດຕິດກັບທິດສະດີ.

ຖາມຄຳຖາມເຫຼົ່ານີ້ເພື່ອເຮັດໃຫ້ຕົນເອງຕື່ນຕົວ:

1. ຄວາມຮູ້ທີ່ຢູ່ພາຍໃນຕົວເຈົ້າແຊກແຊງການທີ່ເຈົ້າຮັບໃຊ້ພຣະເຈົ້າບໍ?

2. ມີການປະຕິບັດທາງສາສະໜາຫຼາຍປານໃດໃນຊີວິດປະຈຳວັນຂອງເຈົ້າ? ຖ້າເຈົ້າສະແດງຄວາມກະຕັນຍູກະຕະເວທີ, ແລ້ວນີ້ໝາຍຄວາມວ່າ ຊີວິດຂອງເຈົ້າໄດ້ເຕີບໃຫຍ່ ແລະ ບັນລຸວຸດທິພາວະແລ້ວບໍ?
3. ເມື່ອເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າສາມາດປະຖິ້ມແນວຄວາມຄິດທາງສາສະໜາຂອງເຈົ້າໄດ້ບໍ?
4. ເມື່ອເຈົ້າອະທິຖານ ເຈົ້າສາມາດອະທິຖານໂດຍປາສະຈາກພິທີກຳທາງສາສະໜາໄດ້ບໍ?
5. ເຈົ້າເປັນຄົນທີ່ເໝາະສົມໃຫ້ພຣະເຈົ້ານຳໃຊ້ບໍ່?
6. ຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າປະກອບດ້ວຍແນວຄວາມຄິດທາງສາສະໜາຫຼາຍສໍ່າໃດ?

# ຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າ ແມ່ນຄວາມຮັກແບບທຳມະຊາດ

ທຸກຄົນແມ່ນຂຶ້ນຢູ່ກັບການຫຼໍ່ຫຼອມຍ້ອນພຣະທຳຂອງພຣະເຈົ້າ. ຖ້າບໍ່ແມ່ນຍ້ອນພຣະເຈົ້າທີ່ບັງເກີດເປັນມະນຸດ ມະນຸດຊາດຈະບໍ່ໄດ້ຮັບພອນໃຫ້ທົນທຸກຜ່ານການຫຼໍ່ຫຼອມນີ້. ສາມາດເວົ້າໄດ້ອີກວ່າຄົນທີ່ສາມາດຍອມຮັບເອົາການທົດລອງແຫ່ງພຣະທຳຂອງພຣະເຈົ້າແມ່ນໄດ້ຮັບການອວຍພອນ. ອີງຕາມຄວາມສາມາດດັ່ງເດີມຂອງຜູ້ຄົນ, ຄວາມປະພຶດຂອງພວກເຂົາ ແລະ ທ່າທີຂອງພວກເຂົາຕໍ່ພຣະເຈົ້າແລ້ວ, ພວກເຂົາບໍ່ສົມຄວນທີ່ຈະໄດ້ຮັບເອົາການຫຼໍ່ຫຼອມແບບນີ້. ນັ້ນກໍຍ້ອນວ່າ ພວກເຂົາຖືກພຣະເຈົ້າຍົກຂຶ້ນຈຶ່ງເຮັດໃຫ້ພວກເຂົາໄດ້ຮັບການອວຍພອນນີ້. ຜູ້ຄົນເຄີຍເວົ້າວ່າ ພວກເຂົາບໍ່ສົມຄວນທີ່ຈະເຫັນໜ້າຂອງພຣະເຈົ້າ ຫຼື ໄດ້ຍິນພຣະທຳຂອງພຣະອົງ. ໃນປັດຈຸບັນ ທັງໝົດແມ່ນເປັນຍ້ອນການຍົກຂຶ້ນຂອງພຣະເຈົ້າ ແລະ ຄວາມກະລຸນາຂອງພຣະອົງທີ່ເຮັດໃຫ້ຜູ້ຄົນໄດ້ຮັບເອົາການຫຼໍ່ຫຼອມແຫ່ງພຣະທຳຂອງພຣະອົງ. ນີ້ແມ່ນການໄດ້ຮັບພອນຂອງແຕ່ລະຄົນທີ່ເກີດໃນຍຸກສຸດທ້າຍ, ພວກເຈົ້າໄດ້ຜະເຊີນກັບສິ່ງນີ້ດ້ວຍຕົນເອງແລ້ວບໍ? ໃນລັກສະນະທີ່ຜູ້ຄົນຄວນທົນທຸກ ແລະ ໄດ້ຮັບຄວາມລຳບາກແມ່ນຖືກກຳນົດໂດຍພຣະເຈົ້າ ແລະ ບໍ່ໄດ້ອີງຕາມເງື່ອນໄຂຂອງຜູ້ຄົນ. ສິ່ງນີ້ແມ່ນຄວາມຈິງຢ່າງແນ່ນອນ. ຜູ້ທີ່ມີຄວາມເຊື່ອທຸກຄົນຄວນມີຄວາມສາມາດທີ່ຈະຍອມຮັບການທົດລອງແຫ່ງພຣະທຳຂອງພຣະເຈົ້າ ແລະ ທົນທຸກຢູ່ພາຍໃນພຣະທຳຂອງພຣະອົງ. ສິ່ງນີ້ຊັດເຈນກັບພວກເຈົ້າແລ້ວບໍ? ສະນັ້ນ ເພື່ອເປັນການແລກປ່ຽນສຳລັບຄວາມທຸກທໍລະມານທີ່ພວກເຈົ້າໄດ້ຜ່ານພົ້ນມາ ເຈົ້າຈະໄດ້ຮັບພອນຂອງມື້ນີ້; ຖ້າເຈົ້າບໍ່ທົນທຸກເພື່ອພຣະເຈົ້າ, ເຈົ້າກໍບໍ່ສາມາດຮັບເອົາການຍົກຍ້ອງຈາກພຣະອົງໄດ້. ບາງເທື່ອ ເຈົ້າອາດຕໍ່ວ່າໃນອະດີດ, ແຕ່ບໍ່ວ່າເຈົ້າໄດ້ຕໍ່ວ່າຫຼາຍສໍ່າໃດກໍຕາມ ພຣະເຈົ້າກໍຈະບໍ່ຈົດຈຳໃນສິ່ງນັ້ນກ່ຽວກັບເຈົ້າ. ມື້ນີ້ໄດ້ມາເຖິງແລ້ວ ແລະ ບໍ່ມີເຫດຜົນໃດທີ່ຈະພິຈາລະນາບັນຫາຂອງມື້ວານ.

ບາງຄົນເວົ້າວ່າ ພວກເຂົາພະຍາຍາມຮັກພຣະເຈົ້າ ແຕ່ເຮັດບໍ່ໄດ້. ແລ້ວເມື່ອພວກເຂົາໄດ້ຍິນວ່າພຣະເຈົ້າກຳລັງຈະຈາກໄປ, ພວກເຂົາກໍຮູ້ສຶກມີຄວາມຮັກສຳລັບພຣະອົງ. ໂດຍທົ່ວໄປແລ້ວ ບາງຄົນບໍ່ໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ເມື່ອພວກເຂົາໄດ້ຍິນວ່າ ພຣະເຈົ້າກຳລັງຈະຈາກໄປດ້ວຍຄວາມໂກດຮ້າຍ ພວກເຂົາກໍມາຢູ່ຕໍ່ໜ້າພຣະເຈົ້າ ແລະ ອະທິຖານວ່າ "ໂອ ພຣະເຈົ້າ! ກະລຸນາຢ່າໄປເລີຍ. ຂໍໂອກາດໃຫ້ກັບຂ້ານ້ອຍດ້ວຍເຖີດ! ຂ້ານ້ອຍບໍ່ໄດ້ເຮັດໃຫ້ພຣະອົງພໍພຣະໄທໃນອະດີດ; ຂ້ານ້ອຍເປັນໜີ້ບຸນຄຸນພຣະອົງ ແລະ ຕໍ່ຕ້ານພຣະອົງ. ໃນປັດຈຸບັນ ຂ້ານ້ອຍເຕັມໃຈທີ່ຈະຖວາຍຮ່າງກາຍ ແລະຫົວໃຈຂອງຂ້ານ້ອຍທັງໝົດ ເພື່ອຂ້ານ້ອຍຈະເຮັດໃຫ້ພຣະເຈົ້າພໍພຣະໄທ ແລະ ຮັກພຣະອົງໃນທີ່ສຸດ. ຂ້ານ້ອຍຈະບໍ່ມີໂອກາດນີ້ອີກແລ້ວ". ເຈົ້າໄດ້ອະທິຖານແບບນັ້ນຢູ່ບໍ? ເມື່ອຜູ້ຄົນອະທິຖານໃນລັກສະນະນີ້ ມັນກໍຍ້ອນວ່າ ຄວາມສຳນຶກຂອງພວກເຂົາໄດ້ຖືກກະຕຸ້ນໂດຍພຣະທຳຂອງພຣະເຈົ້າ. ມະນຸດລ້ວນແລ້ວແຕ່ເຢັນຊາ ແລະ ໂງ່ຈ້າ. ພວກເຂົາຢູ່ພາຍໃຕ້ການຕີສອນ ແລະ ການຫຼໍ່ຫຼອມ ແຕ່ພວກເຂົາກໍບໍ່ຮູ້ຈັກສິ່ງທີ່ພຣະເຈົ້າກຳລັງເຮັດໃຫ້ສຳເລັດຜ່ານສິ່ງນີ້. ຖ້າພຣະເຈົ້າບໍ່ປະຕິບັດພາລະກິດໃນລັກສະນະນີ້,

ຜູ້ຄົນກໍຈະຍັງສັບສົນ; ບໍ່ມີມະນຸດຄົນໃດສາມາດດົນບັນດານຄວາມຮູ້ສຶກຝ່າຍວິນຍານໃນຫົວໃຈຂອງຜູ້ຄົນໄດ້. ມີພຽງແຕ່ພຣະທຳຂອງພຣະເຈົ້າເທົ່ານັ້ນ ເຊິ່ງພິພາກສາ ແລະ ເປີດໂປງຜູ້ຄົນ ທີ່ສາມາດເກີດຜົນນັ້ນໄດ້. ສະນັ້ນ ທຸກສິ່ງຖືກບັນລຸ ແລະ ເຮັດໃຫ້ສຳເລັດຍ້ອນພຣະທຳຂອງພຣະເຈົ້າ ແລະ ເປັນຍ້ອນພຣະທຳຂອງພຣະອົງເທົ່ານັ້ນທີ່ໄດ້ກະຕຸ້ນຄວາມຮັກທີ່ມະນຸດຊາດມີສຳລັບພຣະເຈົ້າ. ຄວາມຮັກຕໍ່ພຣະເຈົ້າໂດຍອີງຕາມຄວາມສຳນຶກຂອງມະນຸດເທົ່ານັ້ນ ຈະບໍ່ໄດ້ຮັບຜົນຮັບທີ່ປາຖະໜາ. ບໍ່ແມ່ນຜູ້ຄົນອີງຄວາມຮັກຂອງພວກເຂົາ ທີ່ມີຕໍ່ພຣະເຈົ້າເທິງຄວາມສຳນຶກໃນອະດີດບໍ? ມີບຸກຄົນໃດແດ່ທີ່ເລີ່ມຕົ້ນຮັກພຣະເຈົ້າດ້ວຍຕົນເອງ? ມັນມີພຽງແຕ່ຜ່ານການດົນໃຈຈາກພຣະທຳຂອງພຣະເຈົ້າເທົ່ານັ້ນ ພວກເຂົາຈຶ່ງຮັກພຣະເຈົ້າ. ບາງຄົນເວົ້າວ່າ "ຂ້ານ້ອຍໄດ້ຕິດຕາມພຣະເຈົ້າເປັນເວລາຫຼາຍປີ ແລະ ຊື່ນຊົມກັບພຣະຄຸນຂອງພຣະອົງ ແລະ ພອນຈາກພຣະອົງຢ່າງຫຼວງຫຼາຍ. ຂ້ານ້ອຍຢູ່ພາຍໃຕ້ການຫຼໍ່ຫຼອມ ແລະການພິພາກສາຈາກພຣະທຳຂອງພຣະອົງ. ດ້ວຍເຫດນັ້ນ ຂ້ານ້ອຍຈຶ່ງໄດ້ມີຄວາມເຂົ້າໃຈຫຼາຍຢ່າງ ແລະ ຂ້ານ້ອຍໄດ້ເຫັນເຖິງຄວາມຮັກຂອງພຣະເຈົ້າ. ຂ້ານ້ອຍຕ້ອງຂອບພຣະຄຸນພຣະອົງ, ຂ້ານ້ອຍຕ້ອງຕອບແທນຄວາມເມດຕາຂອງພຣະອົງ. ຂ້ານ້ອຍຈະເຮັດໃຫ້ພຣະອົງພໍພຣະໄທດ້ວຍຄວາມຕາຍ ແລະຂ້ານ້ອຍຈະຮັກພຣະອົງອີງຕາມຈິດສຳນຶກຂອງຂ້ານ້ອຍ". ຜູ້ຄົນຈະບໍ່ສາມາດ ຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະເຈົ້າ ຖ້າພວກເຂົາຟັງຄວາມຮູ້ສຶກແຫ່ງຈິດສຳນຶກຂອງພວກເຂົາເທົ່ານັ້ນ, ຖ້າພວກເຂົາພຽງແຕ່ອາໄສຄວາມສຳນຶກຂອງພວກເຂົາຢ່າງດຽວ, ຄວາມຮັກທີ່ພວກເຂົາມີສຳລັບພຣະເຈົ້າກໍຈະບໍ່ໜັກແໜ້ນ. ຖ້າເຈົ້າພຽງແຕ່ເວົ້າເຖິງການຕອບແທນຄວາມເມດຕາ ແລະ ຄວາມຮັກຂອງພຣະເຈົ້າ, ເຈົ້າຈະບໍ່ມີການຜັກດັນໃດໆເລີຍໃນຄວາມຮັກຂອງເຈົ້າສຳລັບພຣະອົງ; ການຮັກພຣະອົງທີ່ອີງຕາມຄວາມຮູ້ສຶກຈາກຈິດສຳນຶກຂອງເຈົ້າແມ່ນວິທີການທີ່ບໍ່ຕັ້ງຮັບ. ເປັນຫຍັງເຮົາຈຶ່ງເວົ້າວ່າມັນເປັນວິທີການທີ່ບໍ່ຕັ້ງຮັບ? ນີ້ຄືບັນຫາທີ່ອີງຕາມຄວາມເປັນຈິງ. ຄວາມຮັກຂອງພວກເຈົ້າສຳລັບພຣະເຈົ້າແມ່ນປະເພດໃດ? ມັນບໍ່ແມ່ນການພະຍາຍາມຫຼອກລວງພຣະເຈົ້າ ແລະ ທຳທ່າເຮັດເພື່ອພຣະອົງບໍ? ຫຼາຍຄົນເຊື່ອວ່າ ເມື່ອມັນບໍ່ມີລາງວັນສຳລັບການຮັກພຣະເຈົ້າ ແລະ ທຸກຄົນຈະຖືກຕີສອນຄືກັນໝົດຖ້າບໍ່ຮັກພຣະອົງ, ສະນັ້ນ ໂດຍລວມແລ້ວ ພຽງແຕ່ບໍ່ເຮັດບາບກໍດີພໍແລ້ວ. ດ້ວຍເຫດນັ້ນການຮັກພຣະເຈົ້າ ແລະ ການຕອບແທນຄວາມຮັກຂອງພຣະອົງໂດຍອີງຕາມຄວາມຮູ້ສຶກຈາກຄວາມສຳນຶກຂອງຄົນໆໜຶ່ງ ຈຶ່ງເປັນວິທີການທີ່ບໍ່ຕັ້ງຮັບ ແລະ ມັນບໍ່ແມ່ນຄວາມຮັກສຳລັບພຣະເຈົ້າທີ່ມາຈາກຫົວໃຈດ້ວຍທຳມະຊາດ. ຄວາມຮັກສຳລັບພຣະເຈົ້າຄວນເປັນຄວາມຮູ້ສຶກທີ່ແທ້ຈິງຈາກສ່ວນເລິກໃນຫົວໃຈຂອງບຸກຄົນໜຶ່ງ. ບາງຄົນເວົ້າວ່າ "ຂ້ານ້ອຍເອງເຕັມໃຈທີ່ຈະສະແຫວງຫາພຣະເຈົ້າ ແລະ ຕິດຕາມພຣະອົງ. ບັດນີ້ ເຖິງແມ່ນວ່າ ພຣະເຈົ້າຕ້ອງການປະຖິ້ມຂ້ານ້ອຍ ຂ້ານ້ອຍກໍຍັງຕ້ອງຈະຕິດຕາມພຣະອົງ. ບໍ່ວ່າພຣະອົງຕ້ອງການຂ້ານ້ອຍ ຫຼື ບໍ່, ຂ້ານ້ອຍກໍຈະຍັງຮັກພຣະອົງ ແລະ ໃນທີ່ສຸດແລ້ວ ຂ້ານ້ອຍຕ້ອງຮັບເອົາພຣະອົງ. ຂ້ານ້ອຍຖວາຍຫົວໃຈຂອງຂ້ານ້ອຍໃຫ້ກັບພຣະເຈົ້າ ແລະ ບໍ່ວ່າພຣະອົງຈະກະທຳສິ່ງໃດກໍຕາມ, ຂ້ານ້ອຍຈະຕິດຕາມພຣະອົງຕະຫຼອດຊົ່ວຊີວິດຂອງຂ້ານ້ອຍ. ບໍ່ວ່າຫຍັງກໍຕາມ, ຂ້ານ້ອຍຕ້ອງຮັກພຣະເຈົ້າ ແລະ ຂ້ານ້ອຍຕ້ອງຮັບເອົາພຣະອົງ; ຂ້ານ້ອຍຈະບໍ່ຍອມພັກ

ເຊົາຈົ່ມກ່ວາຂ້ານ້ອຍໄດ້ຮັບເອົາພຣະອົງ". ເຈົ້າມີຄວາມປະສົງແບບນີ້ແມ່ນບໍ?

ເສັ້ນທາງແຫ່ງການເຊື່ອໃນພຣະເຈົ້າແມ່ນເສັ້ນທາງດຽວ ແລະ ຄືກັນກັບເສັ້ນທາງແຫ່ງການຮັກພຣະອົງ. ຖ້າເຈົ້າເຊື່ອໃນພຣະອົງ ເຈົ້າຕ້ອງຮັກພຣະອົງ; ເຖິງຢ່າງໃດກໍຕາມ ການຮັກພຣະອົງບໍ່ພຽງແຕ່ໝາຍເຖິງການຕອບແທນຄວາມຮັກຂອງພຣະອົງ ຫຼື ການຮັກພຣະອົງໂດຍອີງຕາມຄວາມຮູ້ສຶກຈາກຄວາມສຳນຶກຂອງເຈົ້າເທົ່ານັ້ນ, ມັນເປັນຄວາມຮັກທີ່ບໍລິສຸດສຳລັບພຣະເຈົ້າ. ບາງຄັ້ງ ຜູ້ຄົນບໍ່ສາມາດຮູ້ສຶກເຖິງຄວາມຮັກຂອງພຣະເຈົ້າໄດ້ອີງຕາມຄວາມສຳນຶກຂອງພວກເຂົາ. ເຈົ້າອາດຈະມີແຮງຜັກດັນໃນເວລານັ້ນເປັນຫຍັງເຮົາຈຶ່ງເວົ້າຢູ່ສະເໝີວ່າ "ຂໍໃຫ້ພຣະວິນຍານຂອງພຣະເຈົ້າດົນບັນດານຈິດໃຈຂອງພວກເຮົາ"? ເປັນຫຍັງເຮົາຈຶ່ງບໍ່ເວົ້າເຖິງການດົນບັນດານຈິດສຳນຶກຂອງຜູ້ຄົນໃຫ້ຮັກພຣະເຈົ້າ? ນັ້ນກໍຍ້ອນວ່າ ຄວາມສຳນຶກຂອງເຈົ້າບໍ່ສາມາດຮູ້ສຶກເຖິງຄວາມເປັນຕາແພງຂອງພຣະເຈົ້າໄດ້. ຖ້າເຈົ້າບໍ່ເຊື່ອໃນຄຳເວົ້າເຫຼົ່ານັ້ນ, ເຈົ້າຈົ່ງໃຊ້ຄວາມສຳນຶກຂອງເຈົ້າເພື່ອສຳຜັດເຖິງຄວາມຮັກຂອງພຣະອົງລອງເບິ່ງ, ເຈົ້າອາດຈະມີກຳລັງໃຈໃນຊ່ວງເວລາໃດໜຶ່ງ ແຕ່ບໍ່ດົນ ມັນກໍຈະຫາຍໄປ. ຖ້າເຈົ້າພຽງແຕ່ໃຊ້ຄວາມສຳນຶກຂອງເຈົ້າເພື່ອສຳຜັດເຖິງຄວາມເປັນຕາຮັກຂອງພຣະເຈົ້າ, ເຈົ້າກໍພຽງຈະມີກຳລັງໃຈໃນເວລາອະທິຖານ, ແຕ່ຫຼັງຈາກນັ້ນ ກຳລັງໃຈກໍຈະຈາງໄປ ແລະ ຫາຍໄປເລີຍ. ສິ່ງນັ້ນແມ່ນກ່ຽວກັບຫຍັງ? ຖ້າເຈົ້າພຽງແຕ່ໃຊ້ຄວາມສຳນຶກຂອງເຈົ້າ ເຈົ້າກໍຈະບໍ່ສາມາດກະຕຸ້ນຄວາມຮັກຂອງເຈົ້າສຳລັບພຣະເຈົ້າໄດ້; ເມື່ອເຈົ້າຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະເຈົ້າໃນຫົວໃຈຂອງເຈົ້າຢ່າງແທ້ຈິງ ຈິດໃຈຂອງເຈົ້າກໍຈະຖືກພຣະອົງດົນບັນດານ ແລະ ມີພຽງເມື່ອນັ້ນຄວາມສຳນຶກຂອງເຈົ້າຈະສາມາດເຮັດໜ້າທີ່ເດີມຂອງມັນໄດ້. ນັ້ນໝາຍຄວາມວ່າ ເມື່ອມະນຸດຖືກພຣະເຈົ້າດົນບັນດານໃນຈິດໃຈຂອງພວກເຂົາ ແລະ ເມື່ອຫົວໃຈຂອງພວກເຂົາໄດ້ຮັບເອົາຄວາມຮູ້ ແລະ ໄດ້ຮັບການດົນບັນດານໃນໃຈຂອງເຂົາ ນັ້ນກໍຄືຫຼັງຈາກທີ່ເຂົາໄດ້ຮັບເອົາປະສົບການ, ຫຼັງຈາກນັ້ນເທົ່ານັ້ນ ພວກເຂົາຈຶ່ງຈະສາມາດຮັກພຣະເຈົ້າຢ່າງມີປະສິດທິພາບດ້ວຍຄວາມສຳນຶກຂອງພວກເຂົາ. ການຮັກພຣະເຈົ້າດ້ວຍຄວາມສຳນຶກຂອງເຈົ້າບໍ່ແມ່ນສິ່ງທີ່ຜິດ, ແຕ່ມັນແມ່ນລະດັບຄວາມຮັກທີ່ຕໍ່າສຸດໃນການຮັກພຣະເຈົ້າ. ການຮັກທີ່ "ພຽງແຕ່ເຮັດຕາມຄວາມຍຸຕິທຳເພື່ອພຣະຄຸນຂອງພຣະເຈົ້າ" ເທົ່ານັ້ນບໍ່ສາມາດຜັກດັນມະນຸດເຂົ້າໄປຢ່າງໝັ້ນໃຈ. ເມື່ອຜູ້ຄົນໄດ້ຮັບເອົາພາລະກິດບາງສ່ວນຂອງພຣະວິນຍານບໍລິສຸດ ນັ້ນກໍຄື ເມື່ອພວກເຂົາເຫັນ ແລະ ຮູ້ສຶກເຖິງຄວາມຮັກຂອງພຣະເຈົ້າໃນປະສົບການຕົວຈິງຂອງພວກເຂົາ, ເມື່ອພວກເຂົາມີຄວາມຮູ້ບາງຢ່າງກ່ຽວກັບພຣະເຈົ້າ ແລະ ເຫັນຢ່າງແທ້ຈິງວ່າ ພຣະເຈົ້າສົມຄວນແກ່ຄວາມຮັກຂອງມະນຸດຊາດ ແລະ ພຣະອົງເປັນຕາຮັກຫຼາຍພຽງໃດ, ເມື່ອນັ້ນ ພວກເຂົາຈຶ່ງຈະສາມາດຮັກພຣະເຈົ້າຢ່າງແທ້ຈິງ.

ເມື່ອຜູ້ຄົນຕິດຕໍ່ພຣະເຈົ້າດ້ວຍຫົວໃຈຂອງພວກເຂົາ, ເມື່ອຫົວໃຈຂອງພວກເຂົາສາມາດຫັນເຂົ້າຫາພຣະເຈົ້າໄດ້ທັງໝົດ, ນີ້ແມ່ນບາດກ້າວທຳອິດຂອງຄວາມຮັກທີ່ມະນຸດມີໃຫ້ກັບພຣະເຈົ້າ. ຖ້າເຈົ້າຕ້ອງການຮັກພຣະເຈົ້າ, ກ່ອນອື່ນ ເຈົ້າຕ້ອງສາມາດຫັນຫົວໃຈຂອງເຈົ້າເຂົ້າຫາພຣະອົງ. ແມ່ນຫຍັງຄືການຫັນຫົວໃຈຂອງເຈົ້າເຂົ້າຫາພຣະເຈົ້າ? ມັນແມ່ນເມື່ອທຸກສິ່ງທີ່ເຈົ້າສະແຫວງຫາໃນຫົວໃຈຂອງເຈົ້ານັ້ນ ເປັນການສະແຫວງຫາເພື່ອເຫັນແກ່ການຮັກ ແລະ ການຮັບເອົາພຣະເຈົ້າ. ສິ່ງນີ້ສະແດງໃຫ້

ເຫັນວ່າ ເຈົ້າໄດ້ຫັນຫົວໃຈຂອງເຈົ້າເຂົ້າຫາພຣະເຈົ້າຢ່າງສົມບູນ. ນອກຈາກພຣະເຈົ້າ ແລະ ພຣະທຳຂອງພຣະອົງແລ້ວ, ເກືອບຈະບໍ່ມີຫຍັງເລີຍໃນຫົວໃຈຂອງເຈົ້າ (ຄອບຄົວ, ຄວາມຮັ່ງມີ, ສາມີ, ພັນລະຍາ, ລູກ ຫຼື ສິ່ງອື່ນໆ). ເຖິງແມ່ນຈະມີ, ສິ່ງດັ່ງກ່າວກໍບໍ່ຢູ່ໃນຫົວໃຈຂອງເຈົ້າ ແລະ ເຈົ້າກໍຈະບໍ່ຄິດເຖິງຄວາມຫວັງໃນອະນາຄົດຂອງເຈົ້າ ແຕ່ສະແຫວງຫາເພື່ອຮັກພຣະເຈົ້າເທົ່ານັ້ນ. ໃນເວລານັ້ນເຈົ້າຈະຫັນຫົວໃຈຂອງເຈົ້າທັງໝົດເຂົ້າຫາພຣະເຈົ້າໄດ້ຢ່າງສົມບູນ. ສົມມຸດວ່າ ເຈົ້າກຳລັງວາງແຜນຢູ່ໃນໃຈເພື່ອຕົວເຈົ້າເອງ ແລະ ສະແຫວງຫາຜົນປະໂຫຍດສ່ວນຕົວຂອງເຈົ້າຕະຫຼອດ ໂດຍຄິດຢູ່ສະເໝີວ່າ "ເມື່ອໃດຂ້ານ້ອຍຈຶ່ງຈະໄດ້ຮຽກຮ້ອງຫາພຣະເຈົ້າ? ເມື່ອໃດຄອບຄົວຂອງຂ້ານ້ອຍຈຶ່ງຈະຮັ່ງມີ? ຂ້ານ້ອຍຈະສາມາດມີເຄື່ອງນຸ່ງທີ່ດີໄດ້ແນວໃດ? ..." ຖ້າເຈົ້າດຳລົງຊີວິດໃນສະພາບແບບນັ້ນ ມັນກໍສະແດງວ່າຫົວໃຈຂອງເຈົ້າຍັງບໍ່ໄດ້ຫັນເຂົ້າຫາພຣະເຈົ້າຢ່າງສົມບູນເທື່ອ. ຖ້າເຈົ້າມີແຕ່ພຣະທຳຂອງພຣະເຈົ້າໃນຫົວໃຈຂອງເຈົ້າ ແລະ ເຈົ້າສາມາດອະທິຖານຫາພຣະເຈົ້າ ແລະ ໃກ້ຊິດກັບພຣະເຈົ້າຢູ່ຕະຫຼອດເວລາ ຄືກັບວ່າພຣະອົງໃກ້ຊິດກັບເຈົ້າຫຼາຍ, ຄືກັບວ່າພຣະເຈົ້າສະຖິດຢູ່ພາຍໃນເຈົ້າ ແລະ ເຈົ້າຢູ່ພາຍໃນພຣະອົງ, ຖ້າເຈົ້າຢູ່ພາຍໃນສະພາບແບບນັ້ນ, ນັ້ນກໍໝາຍຄວາມວ່າ ຫົວໃຈຂອງເຈົ້າໄດ້ຢູ່ຕໍ່ໜ້າພຣະເຈົ້າແລ້ວ. ຖ້າເຈົ້າອະທິຖານຫາພຣະເຈົ້າ, ກິນ ແລະ ດື່ມພຣະທຳຂອງພຣະອົງໃນແຕ່ລະມື້, ຄິດເຖິງພາລະກິດໃນຄຣິສຕະຈັກຢູ່ສະເໝີ ແລະ ຖ້າເຈົ້າຄຳນຶງເຖິງຄວາມປະສົງຂອງພຣະເຈົ້າ, ໃຊ້ຫົວໃຈຂອງເຈົ້າເພື່ອຮັກພຣະອົງຢ່າງແທ້ຈິງ ແລະ ເຮັດໃຫ້ຫົວໃຈຂອງພຣະອົງພໍໃຈ, ແລ້ວຫົວໃຈຂອງເຈົ້າກໍຈະເປັນຂອງພຣະເຈົ້າ. ຖ້າເຈົ້າມີຫຼາຍສິ່ງຫຼາຍຢ່າງຢູ່ໃນຫົວໃຈ, ກໍແປວ່າຍັງຖືກຊາຕານຄອບຄອງຢູ່ ແລະ ມັນກໍຍັງບໍ່ໄດ້ຫັນເຂົ້າຫາພຣະເຈົ້າຢ່າງແທ້ຈິງ. ເມື່ອຫົວໃຈຂອງຄົນໆໜຶ່ງໄດ້ຫັນເຂົ້າຫາພຣະເຈົ້າຢ່າງແທ້ຈິງ, ພວກເຂົາກໍຈະມີຄວາມຮັກທີ່ແທ້ຈິງ, ເປັນຄວາມຮັກແບບທຳມະຊາດສຳລັບພຣະອົງ ແລະ ພວກເຂົາກໍຈະສາມາດພິຈາລະນາພາລະກິດຂອງພຣະເຈົ້າໄດ້. ເຖິງແມ່ນພວກເຂົາຍັງມີສະພາບທີ່ໂງ່ຈ້າ ແລະ ໄຮ້ສາລະ, ພວກເຂົາກໍຈະສາມາດພິຈາລະນາເຖິງຜົນປະໂຫຍດຂອງຄົວເຮືອນຂອງພຣະເຈົ້າໄດ້, ຄຳນຶງເຖິງພາລະກິດຂອງພຣະອົງ ແລະ ການປ່ຽນແປງໃນອຸປະນິໄສຂອງພວກເຂົາ. ຫົວໃຈຂອງພວກເຂົາຈະຢູ່ໃນບ່ອນທີ່ຖືກຕ້ອງ. ບາງຄົນກໍອ້າງສະເໝີວ່າ ທຸກສິ່ງທີ່ພວກເຂົາກະທຳແມ່ນເພື່ອຄຣິສຕະຈັກຕະຫຼອດ ເມື່ອໃນຄວາມຈິງກໍຄື ພວກເຂົາເຮັດພາລະກິດເພື່ອຜົນປະໂຫຍດຂອງພວກເຂົາເອງ. ຄົນປະເພດນີ້ບໍ່ມີແຮງຈູງໃຈທີ່ຖືກຕ້ອງ. ພວກເຂົາບໍ່ຊື່ສັດ ແລະ ເປັນຄົນຫຼອກລວງ ແລະ ສ່ວນໃຫຍ່ທີ່ພວກເຂົາເຮັດ ກໍເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວຂອງພວກເຂົາເອງ. ຄົນປະເພດນີ້ບໍ່ສະແຫວງຫາເພື່ອຮັກພຣະເຈົ້າ; ຫົວໃຈຂອງເຂົາຍັງເປັນຂອງຊາຕານ ແລະ ບໍ່ສາມາດຫັນເຂົ້າຫາພຣະເຈົ້າໄດ້. ດັ່ງນັ້ນ ພຣະເຈົ້າບໍ່ມີທາງຮັບເອົາຄົນປະເພດນີ້.

ຖ້າເຈົ້າຫວັງທີ່ຈະຮັກພຣະເຈົ້າຢ່າງແທ້ຈິງ ແລະ ຖືກຮັບໂດຍພຣະອົງ, ບາດກ້າວທຳອິດແມ່ນຫັນຫົວໃຈຂອງເຈົ້າໄປເຂົ້າຫາພຣະເຈົ້າຢ່າງສົມບູນ. ທຸກສິ່ງທີ່ເຈົ້າເຮັດ, ຈົ່ງຄົ້ນຫາຕົນເອງ ແລະ ຖາມວ່າ "ຂ້ານ້ອຍກຳລັງເຮັດສິ່ງນີ້ໂດຍອີງຕາມຫົວໃຈແຫ່ງຄວາມຮັກສຳລັບພຣະເຈົ້າຢູ່ບໍ? ມີເຈດຕະນາສ່ວນຕົວໃນສິ່ງນີ້ບໍ? ແມ່ນຫຍັງຄືເປົ້າໝາຍຕົວຈິງຂອງຂ້ານ້ອຍໃນການເຮັດສິ່ງນີ້?" ຖ້າເຈົ້າຕ້ອງການມອບ

ຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ, ກ່ອນອື່ນ ເຈົ້າຕ້ອງເອົາຊະນະຫົວໃຈຂອງເຈົ້າເອງ, ປະຖິ້ມເຈດຕະນາທັງໝົດຂອງເຈົ້າ ແລະ ບັນລຸທຸກສິ່ງເພື່ອພຣະເຈົ້າໂດຍສົມບູນ. ນີ້ແມ່ນເສັ້ນທາງສູ່ການປະຕິບັດເພື່ອມອບຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ. ການເອົາຊະນະຫົວໃຈຂອງບຸກຄົນໃດໜຶ່ງໝາຍເຖິງຫຍັງ? ມັນແມ່ນການປະຖິ້ມຄວາມປາຖະໜາທີ່ເກີນຂອບເຂດຂອງເນື້ອໜັງຂອງບຸກຄົນນັ້ນ, ບໍ່ປາຖະໜາໄດ້ຮັບຄວາມສະບາຍ ຫຼື ຜົນປະໂຫຍດທາງດ້ານຖານະ. ມັນແມ່ນການເຮັດທຸກຢ່າງ ເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ການເຮັດໃຫ້ຈິດໃຈຂອງຄົນໜຶ່ງເຕັມລົ້ນໄປດ້ວຍພຣະອົງ ບໍ່ແມ່ນເພື່ອຕົວເອງ. ນີ້ແມ່ນພຽງພໍແລ້ວ.

ຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າແມ່ນມາຈາກສ່ວນເລິກຢູ່ພາຍໃນຫົວໃຈ: ມັນແມ່ນຄວາມຮັກທີ່ເກີດຂຶ້ນບົນພື້ນຖານແຫ່ງຄວາມຮູ້ຂອງມະນຸດຊາດກ່ຽວກັບພຣະເຈົ້າ. ເມື່ອຫົວໃຈຂອງບາງຄົນຫັນເຂົ້າຫາພຣະເຈົ້າຢ່າງແທ້ຈິງ ແລ້ວພວກເຂົາກໍມີຄວາມຮັກສຳລັບພຣະເຈົ້າ, ແຕ່ຄວາມຮັກນັ້ນບໍ່ໄດ້ບໍລິສຸດ ແລະ ສົມບູນ ຢ່າງແທ້ຈິງ. ນັ້ນກໍຍ້ອນວ່າມີຄວາມແຕກຕ່າງລະຫວ່າງຫົວໃຈຂອງບຸກຄົນທີ່ຫັນເຂົ້າຫາພຣະເຈົ້າຢ່າງສົມບູນ ແລະ ຄົນທີ່ມີຄວາມເຂົ້າໃຈຢ່າງແທ້ຈິງກ່ຽວກັບພຣະເຈົ້າ ແລະ ການບູຊາຢ່າງແທ້ຈິງສຳລັບພຣະອົງ. ຫົນທາງທີ່ມະນຸດບັນລຸຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າ ແລະ ມາຮູ້ຈັກອຸປະນິໄສຂອງພຣະເຈົ້າຄືການຫັນຫົວໃຈຂອງພວກເຂົາເຂົ້າຫາພຣະເຈົ້າ. ຫຼັງຈາກທີ່ມະນຸດມອບຫົວໃຈທີ່ແທ້ຈິງຂອງເຂົາໃຫ້ກັບພຣະເຈົ້າແລ້ວ, ເຂົາຈະໄດ້ເຂົ້າສູ່ປະສົບການຂອງຊີວິດ. ດ້ວຍວິທີນີ້ ອຸປະນິໄສຂອງເຂົາກໍຈະເລີ່ມປ່ຽນແປງ, ຄວາມຮັກຂອງເຂົາສຳລັບພຣະເຈົ້າກໍຈະເຕີບໃຫຍ່ເທື່ອລະໜ້ອຍ ແລະຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າຈະເພີ່ມຂຶ້ນເທື່ອລະໜ້ອຍເຊັ່ນກັນ. ສະນັ້ນ ການຫັນຫົວໃຈເຂົ້າຫາພຣະເຈົ້າຄືເງື່ອນໄຂເບື້ອງຕົ້ນກ່ອນທີ່ຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງປະສົບການຊີວິດ. ເມື່ອຜູ້ຄົນວາງຫົວໃຈຂອງພວກເຂົາຕໍ່ໜ້າພຣະເຈົ້າ, ພວກເຂົາມີພຽງແຕ່ຫົວໃຈທີ່ປາຖະໜາຫາພຣະອົງ ແຕ່ບໍ່ມີຄວາມຮັກສຳລັບພຣະອົງເລີຍ, ເພາະພວກເຂົາບໍ່ມີຄວາມເຂົ້າໃຈກ່ຽວກັບພຣະອົງ. ເຖິງແມ່ນໃນສະຖານະການເຊັ່ນນີ້ ພວກເຂົາກໍບໍ່ມີຄວາມຮັກບາງສ່ວນສຳລັບພຣະເຈົ້າເລີຍ, ມັນບໍ່ເປັນໄປດ້ວຍທຳມະຊາດ ແລະ ມັນບໍ່ເປັນຈິງ. ນີ້ກໍຍ້ອນວ່າ ສິ່ງໃດກໍຕາມທີ່ມາຈາກເນື້ອໜັງຂອງມະນຸດແມ່ນຜົນສະທ້ອນທາງດ້ານອາລົມ ແລະ ບໍ່ໄດ້ມາຈາກຄວາມເຂົ້າໃຈທີ່ແທ້ຈິງ. ມັນເປັນພຽງແຕ່ແຮງຈູງໃຈຊົ່ວໄລຍະເວລາໃດໜຶ່ງ ແລະ ມັນບໍ່ສາມາດເປັນການຮັກໄລຍະຍາວ. ເມື່ອຜູ້ຄົນບໍ່ມີຄວາມເຂົ້າໃຈກ່ຽວກັບພຣະເຈົ້າ ພວກເຂົາພຽງແຕ່ຮັກພຣະອົງໂດຍອີງຕາມຄວາມນິຍົມຂອງພວກເຂົາເອງ ແລະ ແນວຄິດສ່ວນຕົວຂອງພວກເຂົາ; ຄວາມຮັກແບບນັ້ນບໍ່ສາມາດເອີ້ນວ່າຄວາມຮັກທີ່ເປັນໄປຕາມທຳມະຊາດ ຫຼືມັນບໍ່ສາມາດເອີ້ນວ່າຄວາມຮັກທີ່ແທ້ຈິງໄດ້. ເມື່ອຫົວໃຈຂອງມະນຸດຫັນເຂົ້າຫາພຣະເຈົ້າຢ່າງແທ້ຈິງ ແລະ ສາມາດຄິດເຖິງຜົນປະໂຫຍດຂອງພຣະເຈົ້າໃນທຸກສິ່ງ, ແຕ່ຖ້າພວກເຂົາບໍ່ມີຄວາມເຂົ້າໃຈກ່ຽວກັບພຣະເຈົ້າ, ພວກເຂົາກໍບໍ່ສາມາດມີຄວາມຮັກທີ່ເປັນໄປຕາມທຳມະຊາດຢ່າງແທ້ຈິງໄດ້. ສິ່ງທີ່ພວກເຂົາສາມາດເຮັດໄດ້ກໍຄືການປະຕິບັດໜ້າທີ່ບາງຢ່າງສຳລັບຄຣິສຕະຈັກ ຫຼື ປະຕິບັດໜ້າທີ່ຂອງພວກເຂົາເລັກນ້ອຍໂດຍປາສະຈາກພື້ນຖານ. ຄົນປະເພດນີ້ມີອຸປະນິໄສຍາກທີ່ຈະປ່ຽນແປງ; ພວກເຂົາ

ລ້ວນແລ້ວແຕ່ເປັນຄົນທີ່ບໍ່ສະແຫວງຫາຄວາມຈິງ ຫຼື ບໍ່ເຂົ້າໃຈມັນ. ເຖິງແມ່ນຄົນໜຶ່ງຫັນຫົວໃຈຂອງພວກເຂົາເຂົ້າຫາພຣະເຈົ້າຢ່າງແທ້ຈິງ ມັນກໍບໍ່ໄດ້ໝາຍຄວາມວ່າ ຫົວໃຈແຫ່ງຄວາມຮັກທີ່ພວກເຂົາມີສຳລັບພຣະເຈົ້ານັ້ນບໍລິສຸດທັງໝົດ ເພາະຄົນທີ່ມີພຣະເຈົ້າໃນຫົວໃຈຂອງພວກເຂົານັ້ນບໍ່ຈຳເປັນຕ້ອງມີຄວາມຮັກໃນຫົວໃຈຂອງພວກເຂົາສຳລັບພຣະເຈົ້າ. ສິ່ງນີ້ກ່ຽວຂ້ອງກັບຄວາມແຕກຕ່າງລະຫວ່າງຄົນທີ່ສະແຫວງຫາ ຫຼື ບໍ່ສະແຫວງຫາຄວາມເຂົ້າໃຈກ່ຽວກັບພຣະເຈົ້າ. ເມື່ອບຸກຄົນໜຶ່ງມີຄວາມເຂົ້າໃຈກ່ຽວກັບພຣະອົງ, ນັ້ນກໍສະແດງວ່າ ຫົວໃຈຂອງພວກເຂົາໄດ້ຫັນເຂົ້າຫາພຣະເຈົ້າຢ່າງສົມບູນແລ້ວ, ມັນສະແດງໃຫ້ເຫັນວ່າຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າທີ່ພວກເຂົາມີໃນຫົວໃຈຂອງພວກເຂົານັ້ນເປັນໄປຕາມທຳມະຊາດ. ມີພຽງແຕ່ຄົນແບບນັ້ນຈຶ່ງເປັນຄົນທີ່ມີພຣະເຈົ້າໃນຫົວໃຈຂອງພວກເຂົາ. ການຫັນຫົວໃຈຂອງບຸກຄົນໃດໜຶ່ງເຂົ້າຫາພຣະເຈົ້າແມ່ນເງື່ອນໄຂເບື້ອງຕົ້ນກ່ອນທີ່ຈະໃຫ້ພວກເຂົາເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ, ກ່ອນທີ່ຈະເຂົ້າໃຈພຣະເຈົ້າ ແລະ ກ່ອນທີ່ຈະບັນລຸຄວາມຮັກສຳລັບພຣະເຈົ້າ. ມັນບໍ່ແມ່ນຫຼັກໝາຍຂອງການເຮັດໜ້າທີ່ຂອງພວກເຂົາເພື່ອຮັກພຣະເຈົ້າໃຫ້ສຳເລັດ ຫຼື ມັນບໍ່ແມ່ນຫຼັກໝາຍຂອງການມີຄວາມຮັກທີ່ແທ້ຈິງສຳລັບພຣະອົງ. ຫົນທາງດຽວທີ່ຈະເຮັດໃຫ້ບາງຄົນບັນລຸຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າກໍຄືການຫັນຫົວໃຈຂອງພວກເຂົາເຂົ້າຫາພຣະອົງ ເຊິ່ງສິ່ງນັ້ນຍັງເປັນເງື່ອນໄຂທຳອິດທີ່ສິ່ງຊົງສ້າງຂອງພຣະອົງຄວນເຮັດ. ຄົນທີ່ຮັກພຣະເຈົ້າລ້ວນແລ້ວແຕ່ເປັນຄົນທີ່ສະແຫວງຫາຊີວິດ ນັ້ນກໍຄື ຄົນທີ່ສະແຫວງຫາຄວາມຈິງ ແລະ ຄົນທີ່ຕ້ອງການພຣະເຈົ້າຢ່າງແທ້ຈິງ; ພວກເຂົາມີແສງສະຫວ່າງຂອງພຣະວິນຍານບໍລິສຸດ ແລະ ຖືກດົນບັນດານໂດຍພຣະອົງ. ພວກເຂົາລ້ວນແລ້ວແຕ່ສາມາດທີ່ຈະຖືກນຳພາໂດຍພຣະເຈົ້າ.

ເມື່ອບາງຄົນຮູ້ສຶກວ່າພວກເຂົາເປັນໜີ້ບຸນຄຸນພຣະເຈົ້າ ນັ້ນກໍຍ້ອນວ່າ ພວກເຂົາຖືກດົນບັນດານໂດຍພຣະວິນຍານ; ຖ້າພວກເຂົາຮູ້ສຶກແບບນັ້ນ ແລ້ວພວກເຂົາກໍ ມັກຈະມີຫົວໃຈປາຖະໜາ ແລະ ມີຄວາມສາມາດສະແຫວງຫາທາງເຂົ້າສູ່ຊີວິດ. ແຕ່ຖ້າເຈົ້າຢຸດຢູ່ໃນບາດກ້າວໃດໜຶ່ງ, ເຈົ້າກໍຈະບໍ່ສາມາດໄປໄດ້ເລິກກວ່ານັ້ນ; ນອກນັ້ນ ຍັງມີອັນຕະລາຍທີ່ຈະຕິດຢູ່ໃນດາງແຫຂອງຊາຕານ ແລະ ເມື່ອມັນໄປເຖິງຈຸດໃດໜຶ່ງ ເຈົ້າກໍຈະຕົກເປັນຊະເລີຍຂອງຊາຕານ. ແສງສະຫວ່າງຂອງພຣະເຈົ້າເຮັດໃຫ້ຜູ້ຄົນຮູ້ຈັກພວກເຂົາເອງ ແລະ ໃນທີ່ສຸດພວກເຂົາກໍຮູ້ສຶກເປັນໜີ້ບຸນຄຸນຕໍ່ພຣະເຈົ້າ ພ້ອມທັງເຕັມໃຈທີ່ຈະຮ່ວມມືກັບພຣະອົງ ແລະ ປະຖິ້ມສິ່ງຕ່າງໆທີ່ບໍ່ເປັນທີ່ພໍໃຈພຣະອົງ. ນີ້ແມ່ນຫຼັກການແຫ່ງພາລະກິດຂອງພຣະເຈົ້າ. ພວກເຈົ້າລ້ວນແລ້ວແຕ່ເຕັມໃຈທີ່ຈະສະແຫວງຫາການເຕີບໂຕໃນຊີວິດຂອງພວກເຈົ້າ ແລະການຮັກພຣະເຈົ້າ, ແລ້ວເຈົ້າໄດ້ປະຖິ້ມຫົນທາງແບບຜິວເຜີນຂອງເຈົ້າອອກຈາກຕົນເອງແລ້ວບໍ? ຖ້າເຈົ້າພຽງແຕ່ປະຖິ້ມຫົນທາງເຫຼົ່ານັ້ນອອກຈາກຕົນເອງ ແລະ ເຈົ້າບໍ່ໄດ້ລົບກວນສິ່ງໃດ ຫຼື ອວດຕົນເອງ, ນັ້ນແມ່ນການສະແຫວງຫາເພື່ອເຕີບໂຕໃນຊີວິດຂອງເຈົ້າແທ້ບໍ? ຖ້າເຈົ້າບໍ່ມີຄວາມປະພຶດແບບຜິວເຜີນເລີຍ ແຕ່ເຈົ້າບໍ່ເຂົ້າສູ່ພຣະທຳຂອງພຣະເຈົ້າ, ມັນກໍໝາຍຄວາມວ່າ ເຈົ້າເປັນຄົນທີ່ບໍ່ມີຄວາມຄືບໜ້າຢ່າງຫ້າວຫັນ. ແມ່ນຫຍັງຄືພື້ນຖານຂອງການນຳໃຊ້ຄວາມປະພຶດແບບຜິວເຜີນ? ການກະທຳຂອງເຈົ້າແມ່ນເຫັນແກ່ການເຕີບໃຫຍ່ໃນຊີວິດຂອງເຈົ້າບໍ? ເຈົ້າກຳລັງສະແຫວງຫາເພື່ອທີ່

ຈະມີຄຸນສົມບັດໃນການເປັນຄົນຂອງພຣະເຈົ້າບໍ? ບໍ່ວ່າແມ່ນຫຍັງກໍຕາມທີ່ເຈົ້າໃສ່ໃຈ ຈະເປັນສິ່ງທີ່ເຈົ້າດຳລົງຊີວິດຕາມ; ຖ້າເຈົ້າໃສ່ໃຈກັບຫົນທາງແບບຜິວເຜີນ ແລ້ວຫົວໃຈຂອງເຈົ້າກໍໃສ່ໃຈຢູ່ພາຍນອກ ແລະ ເຈົ້າຈະບໍ່ມີທາງສະແຫວງຫາການເຕີບໃຫຍ່ໃນຊີວິດຂອງເຈົ້າ. ພຣະເຈົ້າຕ້ອງການໆປ່ຽນແປງໃນອຸປະນິໄສ, ແຕ່ເຈົ້າສະແຫວງຫາສິ່ງທີ່ຢູ່ພາຍນອກສະເໝີ; ຄົນປະເພດນີ້ບໍ່ມີທາງປ່ຽນແປງອຸປະນິໄສຂອງພວກເຂົາໄດ້! ທຸກຄົນມີຫົນທາງສະເພາະກ່ອນທີ່ພວກເຂົາຈະເລີ່ມເຕີບໃຫຍ່ໃນຊີວິດຂອງພວກເຂົາ ເຊິ່ງພວກເຂົາຕ້ອງຍອມຮັບການພິພາກສາ, ການຕີສອນ ແລະ ການເຮັດໃຫ້ພຣະທຳຂອງພຣະເຈົ້າສົມບູນ. ຖ້າເຈົ້າບໍ່ມີພຣະທຳຂອງພຣະເຈົ້າ ແຕ່ເຈົ້າພຽງແຕ່ເພິ່ງພາຄວາມໝັ້ນໃຈ ແລະ ຄວາມປະສົງຂອງເຈົ້າເອງ, ທຸກສິ່ງທີ່ເຈົ້າເຮັດກໍພຽງອີງຕາມຄວາມກະຕືລືລົ້ນ. ນັ້ນຄື ຖ້າເຈົ້າຕ້ອງການຄວາມເຕີບໃຫຍ່ໃນຊີວິດຂອງເຈົ້າ ເຈົ້າຕ້ອງກິນ ແລະ ດື່ມ ແລະ ເຂົ້າໃຈພຣະທຳຂອງພຣະເຈົ້າຫຼາຍຍິ່ງຂຶ້ນ. ທຸກຄົນທີ່ຖືກພຣະທຳຂອງພຣະອົງເຮັດໃຫ້ສົມບູນ ກໍສາມາດທີ່ຈະດຳລົງຊີວິດຕາມສິ່ງເຫຼົ່ານັ້ນໄດ້; ຄົນທີ່ບໍ່ໄດ້ຜ່ານການຫຼໍ່ຫຼອມແຫ່ງພຣະທຳຂອງພຣະອົງ ແລະ ຄົນທີ່ບໍ່ໄດ້ຜ່ານຄຳພິພາກສາແຫ່ງພຣະທຳຂອງພຣະອົງ ແມ່ນບໍ່ເໝາະສົມທີ່ຈະຖືກພຣະອົງໃຊ້. ແລ້ວພວກເຈົ້າດຳລົງຊີວິດຕາມພຣະທຳຂອງພຣະອົງຈົນຮອດລະດັບໃດແລ້ວ? ພຽງແຕ່ຖ້າພວກເຈົ້າກິນ ແລະ ດື່ມພຣະທຳຂອງພຣະອົງ ແລະ ສາມາດປຽບທຽບສິ່ງເຫຼົ່ານັ້ນກັບສະພາບຊີວິດຂອງເຈົ້າເອງ ແລະ ຄົ້ນຫາເສັ້ນທາງໃນການປະຕິບັດຕາມຄວາມຈິງຂອງບັນຫາທີ່ເຮົານຳສະເໜີ ແລ້ວການປະຕິບັດຂອງພວກເຈົ້າກໍຈະຖືກຕ້ອງ. ນອກນັ້ນຍັງຈະເປັນໄປຕາມຫົວໃຈຂອງພຣະເຈົ້າ. ມີພຽງແຕ່ຄົນທີ່ມີການປະຕິບັດແບບນີ້ເທົ່ານັ້ນ ຈຶ່ງເປັນຄົນທີ່ມີຄວາມປະສົງເພື່ອຮັກພຣະເຈົ້າ.

# ວ່າດ້ວຍການປະຕິບັດການອະທິຖານ

ພວກເຈົ້າບໍ່ໃຫ້ຄວາມສຳຄັນກ່ຽວກັບຄຳອະທິຖານໃນຊີວິດປະຈຳວັນຂອງພວກເຈົ້າ. ມະນຸດເມີນເສີຍເລື່ອງຄຳອະທິຖານ. ຄຳອະທິຖານເຄີຍເຮັດພໍເປັນພິທີ ໂດຍທີ່ມະນຸດພຽງແຕ່ທຳທ່າເຮັດຕໍ່ໜ້າພຣະເຈົ້າ. ບໍ່ມີມະນຸດຄົນໃດເຄີຍຖວາຍຫົວໃຈຂອງເຂົາຕໍ່ໜ້າພຣະເຈົ້າຢ່າງສົມບູນ ແລະ ມີສ່ວນຮ່ວມໃນການອະທິຖານກັບພຣະເຈົ້າຢ່າງແທ້ຈິງ. ມະນຸດພຽງແຕ່ອະທິຖານຫາພຣະເຈົ້າເມື່ອເກີດບັນຫາຂຶ້ນເທົ່ານັ້ນ. ຕະຫຼອດເວລານີ້, ເຈົ້າເຄີຍອະທິຖານຫາພຣະເຈົ້າຢ່າງແທ້ຈິງບໍ? ເຄີຍມີເວລາທີ່ເຈົ້າຮ້ອງໄຫ້ດ້ວຍນໍ້າຕາແຫ່ງຄວາມເຈັບປວດຕໍ່ໜ້າພຣະເຈົ້າບໍ? ເຄີຍມີເວລາທີ່ເຈົ້າມາຮູ້ຈັກຕົນເອງຕໍ່ໜ້າພຣະອົງບໍ? ເຈົ້າເຄີຍອະທິຖານຫາພຣະເຈົ້າຢ່າງເປີດໃຈບໍ? ຄຳອະທິຖານເກີດຂຶ້ນຜ່ານການປະຕິບັດ: ຖ້າເຈົ້າບໍ່ອະທິຖານຢູ່ເຮືອນເປັນປົກກະຕິ, ແລ້ວເຈົ້າກໍ່ຈະບໍ່ມີທາງອະທິຖານໃນຄຣິດຕະຈັກ ແລະ ຖ້າເຈົ້າບໍ່ອະທິຖານເປັນປົກກະຕິໃນການເຕົ້າໂຮມຂະໜາດນ້ອຍ, ແລ້ວເຈົ້າກໍ່ຈະບໍ່ສາມາດອະທິຖານໃນການເຕົ້າໂຮມຂະໜາດໃຫຍ່ໄດ້. ຖ້າເຈົ້າບໍ່ຍັບເຂົ້າໃກ້ພຣະເຈົ້າເປັນປົກກະຕິ ຫຼື ຮໍາພຶງເຖິງພຣະທຳຂອງພຣະເຈົ້າ, ແລ້ວເຈົ້າກໍ່ຈະບໍ່ມີຫຍັງໃຫ້ເວົ້າເຖິງ ເມື່ອມັນຮອດເວລາອະທິຖານ ແລະ ເຖິງແມ່ນວ່າຖ້າເຈົ້າອະທິຖານ, ເຈົ້າກໍ່ຈະພຽງແຕ່ອະທິຖານແຕ່ປາກ; ມັນຈະບໍ່ແມ່ນຄຳອະທິຖານທີ່ແທ້ຈິງ.

ຄຳອະທິຖານທີ່ແທ້ຈິງແມ່ນຫຍັງ? ມັນເປັນການບອກພຣະເຈົ້າກ່ຽວກັບສິ່ງທີ່ຢູ່ໃນຫົວໃຈຂອງເຈົ້າ, ສື່ສານກັບພຣະເຈົ້າເມື່ອເຈົ້າເຂົ້າໃຈຄວາມປະສົງຂອງພຣະອົງ, ສື່ສານກັບພຣະເຈົ້າຜ່ານພຣະທຳຂອງພຣະອົງ, ຮູ້ສຶກໃກ້ຊິດກັບພຣະເຈົ້າເປັນພິເສດ, ຮູ້ສຶກວ່າພຣະອົງຢູ່ທີ່ນັ້ນຕໍ່ໜ້າເຈົ້າ ແລະ ເຊື່ອວ່າເຈົ້າມີບາງສິ່ງໃຫ້ເວົ້າກັບພຣະອົງ. ຫົວໃຈຂອງເຈົ້າຮູ້ສຶກຄືວ່າເຕັມໄປດ້ວຍແສງສະຫວ່າງ ແລະ ເຈົ້າຮູ້ສຶກວ່າພຣະເຈົ້າເປັນຕາຮັກຫຼາຍສໍ່າໃດ. ເຈົ້າຮູ້ສຶກມີແຮງດົນບັນດານໃຈເປັນພິເສດ ແລະ ການຮັບຟັງເຈົ້າໄດ້ນຳຄວາມພໍໃຈມາສູ່ອ້າຍເອື້ອຍນ້ອງຂອງເຈົ້າ. ພວກເຂົາຈະຮູ້ສຶກວ່າຄຳເວົ້າທີ່ເຈົ້າກ່າວແມ່ນຄຳເວົ້າທີ່ຢູ່ພາຍໃນຫົວໃຈຂອງພວກເຂົາ, ຄຳເວົ້າທີ່ພວກເຂົາປາຖະໜາຈະເວົ້າ, ຄືກັບວ່າຄຳເວົ້າຂອງເຈົ້າເປັນຄຳເວົ້າແທນພວກເຂົາເອງ. ນີ້ຄືຄວາມໝາຍຂອງຄຳອະທິຖານທີ່ແທ້ຈິງ. ຫຼັງຈາກທີ່ເຈົ້າມີສ່ວນຮ່ວມໃນການອະທິຖານຢ່າງແທ້ຈິງ, ຫົວໃຈຂອງເຈົ້າກໍ່ຈະສະຫງົບສຸກ ແລະ ຈະຮູ້ຈັກຄວາມພໍໃຈ. ກຳລັງທີ່ຈະຮັກພຣະເຈົ້າສາມາດເກີດຂຶ້ນ ແລະ ເຈົ້າຈະຮູ້ສຶກວ່າບໍ່ມີຄຸນຄ່າ ຫຼື ຄວາມໝາຍຫຍັງທີ່ຍິ່ງໃຫຍ່ໃນຊີວິດໄປກວ່າການຮັກພຣະເຈົ້າ. ທັງໝົດນີ້ຈະພິສູດວ່າຄຳອະທິຖານຂອງເຈົ້າແມ່ນມີປະສິດທິຜົນ. ເຈົ້າເຄີຍອະທິຖານໃນລັກສະນະນັ້ນບໍ?

ແລ້ວເນື້ອໃນຂອງຄຳອະທິຖານເດ? ຄຳອະທິຖານຂອງເຈົ້າຄວນດຳເນີນໄປເທື່ອລະບາດກ້າວໂດຍສອດຄ່ອງກັບສະພາວະທີ່ແທ້ຈິງໃນຫົວໃຈຂອງເຈົ້າ ແລະ ພາລະກິດຂອງພຣະວິນຍານບໍລິສຸດ; ເຈົ້າສາມາດສື່ສານກັບພຣະເຈົ້າຕາມຄວາມປະສົງຂອງພຣະອົງ ແລະ ຕາມສິ່ງທີ່ພຣະອົງຮຽກຮ້ອງຈາກມະນຸດ. ເມື່ອເຈົ້າເລີ່ມປະຕິບັດການອະທິຖານ, ກ່ອນອື່ນແມ່ນໃຫ້ມອບຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ. ຢ່າພະຍາຍາມເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ພຽງແຕ່ພະຍາຍາມກ່າວຄຳເວົ້າທີ່ຢູ່ພາຍໃນ

ໃຈຂອງເຈົ້າຕໍ່ພຣະເຈົ້າ. ເມື່ອເຈົ້າມາຢູ່ຕໍ່ໜ້າພຣະເຈົ້າແລ້ວ, ໃຫ້ກ່າວໃນລັກສະນະນີ້: "ໂອ້ ພຣະເຈົ້າ! ຂ້ານ້ອຍຫາກໍ່ຮູ້ມື້ນີ້ວ່າຂ້ານ້ອຍເຄີຍບໍ່ເຊື່ອຟັງພຣະອົງ. ຂ້ານ້ອຍເປັນຄົນເສື່ອມຊາມ ແລະ ເປັນຕາລັງກຽດແທ້ໆ. ຂ້ານ້ອຍໄດ້ເສຍເວລາໃນຊີວິດຂອງຂ້ານ້ອຍເທົ່ານັ້ນ. ນັບຕັ້ງແຕ່ມື້ນີ້ໄປ, ຂ້ານ້ອຍຈະດຳລົງຊີວິດຢູ່ເພື່ອພຣະອົງເຈົ້າ. ຂ້ານ້ອຍຈະໃຊ້ຊີວິດຢ່າງມີຄວາມໝາຍ ແລະ ເຮັດຕາມຄວາມປະສົງຂອງພຣະອົງ. ຂໍໃຫ້ພຣະວິນຍານຂອງພຣະອົງປະຕິບັດພາລະກິດຢູ່ໃນຕົວຂ້ານ້ອຍຢູ່ສະເໝີ, ສ່ອງແສງ ແລະ ເຍືອງທາງໃຫ້ແກ່ຂ້ານ້ອຍຢ່າງຕໍ່ເນື່ອງ. ຂໍໃຫ້ຂ້ານ້ອຍເປັນພະຍານຢ່າງເຂັ້ມແຂງ ແລະ ກ້ອງກັງວານຕໍ່ໜ້າພຣະອົງ. ຂໍໃຫ້ຊາຕານເຫັນເຖິງສະຫງ່າລາສີຂອງພຣະອົງ, ຄຳພະຍານຂອງພຣະອົງ ແລະ ຂໍໃຫ້ຫຼັກຖານໄຊຊະນະຂອງພຣະອົງສຳແດງໃນພວກຂ້ານ້ອຍ". ເມື່ອເຈົ້າອະທິຖານໃນລັກສະນະນີ້, ຫົວໃຈຂອງເຈົ້າຈະຖືກປົດປ່ອຍເປັນອິດສະຫຼະຢ່າງສົມບູນ. ເມື່ອໄດ້ອະທິຖານໃນລັກສະນະນີ້, ຫົວໃຈຂອງເຈົ້າກໍ່ຈະໃກ້ຊິດກັບພຣະເຈົ້າຍິ່ງຂຶ້ນ ແລະ ຖ້າເຈົ້າສາມາດອະທິຖານໃນລັກສະນະນີ້ຢູ່ເລື້ອຍໆ, ພຣະວິນຍານບໍລິສຸດກໍ່ຈະປະຕິບັດພາລະກິດໃນຕົວເຈົ້າຢ່າງຫຼີກເວັ້ນບໍ່ໄດ້. ຖ້າເຈົ້າເອີ້ນຫາພຣະເຈົ້າໃນລັກສະນະນີ້ຢູ່ສະເໝີ ແລະ ຕັ້ງໃຈຕໍ່ໜ້າພຣະອົງ, ມື້ໜຶ່ງທີ່ຄວາມຕັ້ງໃຈຂອງເຈົ້າຈະສາມາດເປັນທີ່ຍອມຮັບຕໍ່ໜ້າພຣະເຈົ້າກໍ່ຈະມາເຖິງ, ເມື່ອຫົວໃຈຂອງເຈົ້າ ແລະ ການເປັນຢູ່ທັງໝົດຂອງເຈົ້າຖືກຮັບເອົາໂດຍພຣະເຈົ້າ ແລະ ໃນທີ່ສຸດແລ້ວ ເຈົ້າກໍ່ຈະຖືກເຮັດໃຫ້ສົມບູນໂດຍພຣະອົງ. ສຳລັບພວກເຈົ້າແລ້ວ, ຄຳອະທິຖານມີຄວາມສຳຄັນທີ່ສຸດ. ເມື່ອເຈົ້າອະທິຖານ ແລະ ເຈົ້າໄດ້ຮັບເອົາພາລະກິດຈາກພຣະວິນຍານບໍລິສຸດ, ຫົວໃຈຂອງເຈົ້າກໍ່ຈະໄດ້ຮັບການດົນບັນດານໂດຍພຣະເຈົ້າ ແລະ ກຳລັງທີ່ຈະຮັກພຣະເຈົ້າກໍ່ຈະເກີດຂຶ້ນ. ຖ້າເຈົ້າບໍ່ອະທິຖານດ້ວຍຫົວໃຈຂອງເຈົ້າ, ຖ້າເຈົ້າບໍ່ເປີດຫົວໃຈຂອງເຈົ້າເພື່ອສື່ສານກັບພຣະເຈົ້າ, ແລ້ວພຣະເຈົ້າກໍ່ຈະບໍ່ມີທາງປະຕິບັດພາລະກິດໃນຕົວເຈົ້າໄດ້. ຫຼັງຈາກທີ່ໄດ້ອະທິຖານ ແລະ ກ່າວຄຳເວົ້າຈາກຫົວໃຈຂອງເຈົ້າ, ຖ້າພຣະວິນຍານຂອງພຣະເຈົ້າບໍ່ໄດ້ເລີ່ມພາລະກິດຂອງພຣະອົງ ແລະ ເຈົ້າບໍ່ໄດ້ຮັບການດົນບັນດານໃຈເລີຍ, ແລ້ວນີ້ກໍ່ສະແດງວ່າຫົວໃຈຂອງເຈົ້າຂາດຄວາມຈິງຈັງ, ຄຳເວົ້າຂອງເຈົ້າບໍ່ເປັນຈິງ ແລະ ຍັງບໍ່ບໍລິສຸດ. ຫຼັງຈາກທີ່ໄດ້ອະທິຖານ ຖ້າເຈົ້າມີຄວາມຮູ້ສຶກພໍໃຈ, ແລ້ວຄຳອະທິຖານຂອງເຈົ້າກໍ່ເປັນທີ່ຍອມຮັບໄດ້ຕໍ່ພຣະເຈົ້າ ແລະ ພຣະວິນຍານຂອງພຣະເຈົ້າຈະເຮັດພາລະກິດໃນຕົວເຈົ້າ. ໃນຖານະຄົນທີ່ຮັບໃຊ້ຕໍ່ໜ້າພຣະເຈົ້າ, ເຈົ້າບໍ່ສາມາດເຮັດໂດຍບໍ່ມີຄຳອະທິຖານ. ຖ້າເຈົ້າເຫັນວ່າການສື່ສານກັບພຣະເຈົ້າເປັນສິ່ງທີ່ມີຄວາມໝາຍ ແລະ ມີຄຸນຄ່າຢ່າງແທ້ຈິງ, ແລ້ວເຈົ້າຈະສາມາດປະຖິ້ມການອະທິຖານໄດ້ບໍ? ບໍ່ມີຜູ້ໃດສາມາດເຮັດໄດ້ໂດຍບໍ່ມີການສື່ສານກັບພຣະເຈົ້າ. ຖ້າບໍ່ມີການອະທິຖານ, ເຈົ້າກໍ່ດຳລົງຊີວິດຢູ່ໃນເນື້ອໜັງ, ໃນພັນທະນາການຕໍ່ຊາຕານ; ຖ້າບໍ່ມີການອະທິຖານຢ່າງແທ້ຈິງ, ເຈົ້າກໍ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ. ເຮົາຫວັງວ່າພວກເຈົ້າທີ່ເປັນອ້າຍເອື້ອຍນ້ອງຈະສາມາດເຂົ້າຮ່ວມໃນການອະທິຖານຢ່າງແທ້ຈິງໃນແຕ່ລະມື້. ນີ້ບໍ່ແມ່ນການປະຕິບັດຕາມກົດລະບຽບ, ແຕ່ກ່ຽວກັບການບັນລຸຜົນໃດໜຶ່ງ. ເຈົ້າເຕັມໃຈທີ່ຈະເສຍສະຫຼະການຫຼັບນອນ ແລະ ຄວາມສຸກເລັກໆນ້ອຍໆເພື່ອລຸກຂຶ້ນມາໃນຕອນເຊົ້າເພື່ອອະທິຖານໃນຕອນເຊົ້າ ແລະ ມີຄວາມສຸກກັບພຣະທຳຂອງພຣະເຈົ້າບໍ? ຖ້າເຈົ້າອະທິຖານດ້ວຍຫົວໃຈທີ່ບໍລິສຸດ ແລະ ກິນ ແລະ

ດື່ມພຣະທຳຂອງພຣະເຈົ້າແບບນີ້, ເຈົ້າກໍ່ເປັນທີ່ຍອມຮັບຫຼາຍຂຶ້ນຕໍ່ພຣະອົງ. ຖ້າເຈົ້າເຮັດແບບນີ້ທຸກໆເຊົ້າ, ຖ້າເຈົ້າປະຕິບັດການມອບຫົວໃຈຂອງເຈົ້າໃຫ້ແກ່ພຣະເຈົ້າໃນທຸກໆມື້, ສື່ສານ ແລະ ພົວພັນກັບພຣະອົງ, ແລ້ວຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າກໍ່ຈະເພີ່ມຂຶ້ນຢ່າງແນ່ນອນ ແລະ ເຈົ້າຈະສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້ດີຂຶ້ນ. ເຈົ້າຈະເວົ້າວ່າ: "ໂອ ພຣະເຈົ້າ! ຂ້ານ້ອຍເຕັມໃຈທີ່ຈະປະຕິບັດໜ້າທີ່ຂອງຂ້ານ້ອຍໃຫ້ສຳເລັດ. ຂ້ານ້ອຍສາມາດເຮັດໄດ້ພຽງແຕ່ມອບທັງໝົດຂອງຂ້ານ້ອຍໃຫ້ກັບພຣະອົງ, ເພື່ອວ່າພຣະອົງອາດໄດ້ຮັບສະຫງ່າລາສີຈາກພວກຂ້ານ້ອຍ, ເພື່ອວ່າພຣະອົງອາດມີຄວາມສຸກກັບຄຳພະຍານທີ່ເກີດຈາກພວກເຮົາຄົນກຸ່ມນີ້. ຂ້ານ້ອຍຂໍໃຫ້ພຣະອົງເຮັດພາລະກິດໃນພວກຂ້ານ້ອຍ, ເພື່ອວ່າຂ້ານ້ອຍອາດສາມາດຮັກພຣະອົງຢ່າງແທ້ຈິງ ແລະ ເຮັດໃຫ້ພຣະອົງພໍໃຈ ແລະ ສະແຫວງຫາພຣະອົງໂດຍເປັນເປົ້າໝາຍຂອງຂ້ານ້ອຍ". ເມື່ອເຈົ້າຮັບເອົາພາລະນີ້, ພຣະເຈົ້າຈະເຮັດໃຫ້ເຈົ້າສົມບູນຢ່າງແນ່ນອນ. ເຈົ້າບໍ່ຄວນພຽງແຕ່ອະທິຖານເພື່ອຜົນປະໂຫຍດຂອງເຈົ້າເອງ, ແຕ່ເຈົ້າຄວນອະທິຖານເພື່ອປະຕິບັດຄວາມປະສົງຂອງພຣະເຈົ້າ ແລະ ຮັກພຣະອົງອີກດ້ວຍ. ນີ້ຄືຄຳອະທິຖານປະເພດທີ່ແທ້ຈິງທີ່ສຸດ. ເຈົ້າເປັນຄົນທີ່ອະທິຖານເພື່ອເຫັນແກ່ການປະຕິບັດຄວາມປະສົງຂອງພຣະເຈົ້າບໍ?

ໃນອະດີດ, ພວກເຈົ້າບໍ່ຮູ້ຈັກວິທີການອະທິຖານ ແລະ ພວກເຈົ້າເມີນເສີຍເລື່ອງການອະທິຖານ. ຕອນນີ້, ພວກເຈົ້າຕ້ອງເຮັດສຸດຄວາມສາມາດຂອງພວກເຈົ້າເພື່ອຝຶກຝົນຕົນເອງໃຫ້ອະທິຖານ. ຖ້າເຈົ້າບໍ່ສາມາດຮວບຮວມກຳລັງພາຍໃນຕົວເຈົ້າເພື່ອຮັກພຣະເຈົ້າ, ແລ້ວເຈົ້າຈະອະທິຖານແນວໃດ? ເຈົ້າຈະເວົ້າວ່າ: "ໂອ້ ພຣະເຈົ້າ, ຫົວໃຈຂອງຂ້ານ້ອຍບໍ່ສາມາດຮັກພຣະອົງໄດ້ຢ່າງແທ້ຈິງ. ຂ້ານ້ອຍປາຖະໜາທີ່ຈະຮັກພຣະອົງ, ແຕ່ຂ້ານ້ອຍຂາດກຳລັງ. ຂ້ານ້ອຍຄວນເຮັດແນວໃດ? ຂໍໃຫ້ພຣະອົງເປີດຕາຝ່າຍວິນຍານຂອງຂ້ານ້ອຍ ແລະ ຂໍໃຫ້ພຣະວິນຍານຂອງພຣະອົງດົນບັນດານຫົວໃຈຂອງຂ້ານ້ອຍ. ຂໍໃຫ້ມັນເປັນແບບນັ້ນເມື່ອຂ້ານ້ອຍມາຢູ່ຕໍ່ໜ້າພຣະອົງ, ຂ້ານ້ອຍໂຍນທຸກສິ່ງທີ່ບໍ່ດີອອກແລ້ວ, ເຊົາຈາກການຖືກບັງຄັບໂດຍບຸກຄົນ, ເລື່ອງ ຫຼື ສິ່ງໃດໜຶ່ງ ແລະ ວາງຫົວໃຈຂອງຂ້ອຍຕໍ່ໜ້າພຣະອົງຢ່າງສົມບູນ ແລະ ຂໍໃຫ້ມັນເປັນແບບນັ້ນເພື່ອວ່າຂ້ານ້ອຍອາດຖວາຍການເປັນຢູ່ທັງໝົດຂອງຂ້ານ້ອຍຕໍ່ໜ້າພຣະອົງ. ເຖິງຢ່າງໃດກໍ່ຕາມ, ພຣະອົງອາດທົດສອບຂ້ານ້ອຍ, ຂ້ານ້ອຍພ້ອມແລ້ວ. ຕອນນີ້, ຂ້ານ້ອຍບໍ່ຄຳນຶງເຖິງຄວາມຄາດຫວັງໃນອະນາຄົດຂອງຂ້ານ້ອຍ ຫຼື ຂ້ານ້ອຍບໍ່ໄດ້ຢູ່ພາຍໃຕ້ແອກແຫ່ງຄວາມຕາຍ. ດ້ວຍຫົວໃຈທີ່ຮັກພຣະອົງ, ຂ້ານ້ອຍປາຖະໜາທີ່ຈະສະແຫວງຫາເສັ້ນທາງແຫ່ງຊີວິດ. ທຸກເລື່ອງ, ທຸກສິ່ງ, ມັນລ້ວນແລ້ວແຕ່ຢູ່ໃນມືຂອງພຣະອົງ; ໂຊກຊະຕາຂອງຂ້ານ້ອຍຢູ່ໃນມືຂອງພຣະອົງ ແລະ ພຣະອົງກຸມຊີວິດຂອງຂ້ານ້ອຍໄວ້ໃນມືຂອງພຣະອົງແທ້ໆ. ຕອນນີ້, ຂ້ານ້ອຍສະແຫວງຫາເພື່ອຮັກພຣະອົງ ແລະ ບໍ່ວ່າພຣະອົງຈະປ່ອຍໃຫ້ຂ້ານ້ອຍຮັກພຣະອົງ ຫຼື ບໍ່, ບໍ່ວ່າຊາຕານຈະແຊກແຊງແນວໃດ, ຂ້ານ້ອຍກໍ່ຕັ້ງໃຈທີ່ຈະຮັກພຣະອົງ". ເມື່ອເຈົ້າພົບກັບບັນຫານີ້, ໃຫ້ອະທິຖານແບບນີ້. ຖ້າເຈົ້າອະທິຖານແບບນີ້ທຸກມື້, ກຳລັງທີ່ຈະຮັກພຣະເຈົ້າກໍ່ຈະມີຫຼາຍຂຶ້ນເທື່ອລະໜ້ອຍ.

ເຮົາຈະເຂົ້າສູ່ຄຳອະທິຖານທີ່ແທ້ຈິງແນວໃດ?

ເມື່ອກຳລັງອະທິຖານ, ເຈົ້າຕ້ອງມີຫົວໃຈທີ່ສະຫງົບງຽບຕໍ່ໜ້າພຣະເຈົ້າ ແລະ ເຈົ້າຕ້ອງມີຫົວໃຈ

ທີ່ຈິງໃຈ. ເຈົ້າກຳລັງສື່ສານ ແລະ ອະທິຖານກັບພຣະເຈົ້າຢ່າງແທ້ຈິງ, ເຈົ້າຕ້ອງບໍ່ພະຍາຍາມຊັກຈູງພຣະເຈົ້າດ້ວຍຄຳເວົ້າທີ່ຈົບງາມ. ຄຳອະທິຖານຄວນສຸມໃສ່ສິ່ງທີ່ພຣະເຈົ້າປາຖະໜາຈະບັນລຸຜົນໃນຕອນນີ້. ຂໍໃຫ້ພຣະເຈົ້າມອບຄວາມສະຫວ່າງ ແລະ ແສງເຍືອງທາງທີ່ຍິ່ງໃຫຍ່ໃຫ້ແກ່ເຈົ້າ, ນຳເອົາສະພາວະຕົວຈິງຂອງເຈົ້າ ແລະ ບັນຫາຂອງເຈົ້າມາຢູ່ຕໍ່ໜ້າຂອງພຣະອົງ ເມື່ອເຈົ້າອະທິຖານ ເຊິ່ງລວມເຖິງຄວາມຕັ້ງໃຈທີ່ເຈົ້າມີຕໍ່ໜ້າພຣະເຈົ້າ. ຄຳອະທິຖານບໍ່ໄດ້ກ່ຽວຂ້ອງກັບການປະຕິບັດຕາມຂະບວນການ; ມັນກ່ຽວກັບການສະແຫວງຫາພຣະເຈົ້າດ້ວຍຫົວໃຈທີ່ຈິງໃຈ. ຂໍພຣະເຈົ້າປົກປ້ອງຫົວໃຈຂອງເຈົ້າ, ເພື່ອວ່າຫົວໃຈຂອງເຈົ້າອາດສະຫງົບລົງຕໍ່ໜ້າພຣະອົງຢູ່ເລື້ອຍໆ; ເພື່ອວ່າໃນສະພາບແວດລ້ອມທີ່ພຣະອົງໄດ້ຈັດວາງເຈົ້າ, ເຈົ້າຈະຮູ້ຈັກຕົນເອງ, ກຽດຊັງຕົນເອງ ແລະ ປະຖິ້ມຕົນເອງ ແລ້ວປ່ອຍໃຫ້ເຈົ້າມີຄວາມສຳພັນທີ່ເປັນປົກກະຕິກັບພຣະເຈົ້າ ແລະ ກາຍມາເປັນຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ.

ແມ່ນຫຍັງຄືຄວາມໝາຍຂອງຄຳອະທິຖານ?

ຄຳອະທິຖານແມ່ນໜຶ່ງໃນວິທີທີ່ມະນຸດຮ່ວມມືກັບພຣະເຈົ້າ, ມັນເປັນວິທີການທີ່ມະນຸດເອີ້ນຫາພຣະເຈົ້າ ແລະ ມັນເປັນຂະບວນການທີ່ມະນຸດຖືກດົນບັນດານໂດຍພຣະວິນຍານຂອງພຣະເຈົ້າ. ມັນສາມາດເວົ້າໄດ້ວ່າ ຄົນທີ່ບໍ່ມີຄຳອະທິຖານແມ່ນຄົນຕາຍທີ່ບໍ່ມີຈິດວິນຍານ ເຊິ່ງພິສູດວ່າພວກເຂົາຂາດຄວາມສາມາດທີ່ຈະຖືກດົນບັນດານໂດຍພຣະເຈົ້າ. ຖ້າບໍ່ມີຄຳອະທິຖານ, ມັນຈະເປັນໄປບໍ່ໄດ້ທີ່ຈະມີຊີວິດຝ່າຍວິນຍານທີ່ປົກກະຕິ, ແຮງໄກທີ່ຕາມທັນພາລະກິດຂອງພຣະວິນຍານບໍລິສຸດ. ການທີ່ມີຊີວິດຢູ່ໂດຍບໍ່ມີຄຳອະທິຖານຄືການທຳລາຍຄວາມສຳພັນຂອງຄົນໆໜຶ່ງກັບພຣະເຈົ້າ ແລະ ມັນຈະເປັນໄປບໍ່ໄດ້ທີ່ຈະໄດ້ຮັບຄຳຍົກຍ້ອງຈາກພຣະເຈົ້າ. ໃນຖານະຜູ້ເຊື່ອໃນພຣະເຈົ້າ, ຍິ່ງຄົນໆໜຶ່ງອະທິຖານຫຼາຍສໍ່າໃດ ນັ້ນກໍ່ຄື ຍິ່ງຄົນໆໜຶ່ງຖືກດົນບັນດານໂດຍພຣະເຈົ້າຫຼາຍສໍ່າໃດ, ຄົນໆນັ້ນກໍ່ຍິ່ງເຕັມໄປດ້ວຍຄວາມຕັ້ງໃຈຫຼາຍສໍ່ານັ້ນ ແລະ ຄົນໆນັ້ນກໍ່ຍິ່ງສາມາດຮັບເອົາແສງສະຫວ່າງໃໝ່ຈາກພຣະເຈົ້າໄດ້ດີຍິ່ງຂຶ້ນສໍ່ານັ້ນ. ຜົນຕາມມາກໍ່ຄື ຄົນປະເພດນີ້ສາມາດຖືກເຮັດໃຫ້ສົມບູນໂດຍພຣະວິນຍານບໍລິສຸດໄດ້ໄວຫຼາຍ.

ຄຳອະທິຖານມຸ່ງໝາຍທີ່ຈະຮັບຜົນຫຍັງ?

ຜູ້ຄົນອາດສາມາດປະຕິບັດການອະທິຖານ ແລະ ເຂົ້າໃຈຄວາມໝາຍຂອງຄຳອະທິຖານ, ແຕ່ການທີ່ຈະໃຫ້ຄຳອະທິຖານບັນລຸຜົນບໍ່ແມ່ນເລື່ອງງ່າຍ. ການອະທິຖານບໍ່ແມ່ນເປັນພຽງແຕ່ການທຳທ່າເຮັດ, ປະຕິບັດຕາມລະບຽບການ ຫຼື ທ່ອງພຣະທຳຂອງພຣະເຈົ້າຂຶ້ນໃຈ. ນັ້ນໝາຍຄວາມວ່າ ຄຳອະທິຖານບໍ່ແມ່ນການກ່າວຄຳເວົ້າໃດໜຶ່ງຄືກັບນົກແກ້ວ ແລະ ມັນບໍ່ແມ່ນການຮຽນແບບຄົນອື່ນ. ໃນຄຳອະທິຖານ, ຄົນໆໜຶ່ງຕ້ອງໄປເຖິງສະພາວະທີ່ຫົວໃຈຂອງຄົນໆນັ້ນຖືກມອບໃຫ້ແກ່ພຣະເຈົ້າ, ເປີດຫົວໃຈຂອງຄົນໆນັ້ນອອກເພື່ອວ່າມັນອາດຈະຖືກດົນບັນດານໂດຍພຣະເຈົ້າ. ຖ້າຄຳອະທິຖານຕ້ອງມີປະສິດທິຜົນ, ແລ້ວມັນກໍ່ຕ້ອງອີງໃສ່ການອ່ານພຣະທຳຂອງພຣະເຈົ້າ. ໂດຍການອະທິຖານຈາກພາຍໃນພຣະທຳຂອງພຣະເຈົ້າເທົ່ານັ້ນ, ຄົນໆໜຶ່ງຈຶ່ງສາມາດໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງທີ່ຍິ່ງໃຫຍ່ຂຶ້ນ. ການສຳແດງອອກເຖິງຄຳອະທິຖານຢ່າງແທ້ຈິງຄື: ການມີຫົວໃຈທີ່ປາຖະໜາຫາທຸກສິ່ງທີ່ພຣະເຈົ້າ

ຮຽກຮ້ອງ ແລະ ຍິ່ງໄປກວ່ານັ້ນກໍ່ຄືຄວາມປາຖະໜາທີ່ຈະບັນລຸສິ່ງທີ່ພຣະອົງຮຽກຮ້ອງ; ການລັງກຽດສິ່ງທີ່ພຣະເຈົ້າລັງກຽດ ແລະ ຫຼັງຈາກນັ້ນກໍ່ໄດ້ຮັບຄວາມເຂົ້າໃຈບາງຢ່າງກ່ຽວກັບມັນ ໂດຍການສ້າງບົນພື້ນຖານນີ້ ແລະ ມີຄວາມຮູ້ ແລະ ຄວາມເຂົ້າໃຈບາງຢ່າງກ່ຽວກັບຄວາມຈິງທີ່ພຣະເຈົ້າໄດ້ອະທິບາຍ. ເມື່ອມີຄວາມຕັ້ງໃຈ, ຄວາມເຊື່ອ, ຄວາມຮູ້ ແລະ ເສັ້ນທາງແຫ່ງການປະຕິບັດຫຼັງຈາກຄຳອະທິຖານ, ມີແຕ່ເມື່ອນັ້ນ ມັນຈຶ່ງສາມາດເອີ້ນວ່າຄຳອະທິຖານ ແລະ ມີແຕ່ຄຳອະທິຖານປະເພດນີ້ຈຶ່ງສາມາດບັນລຸຜົນ. ແຕ່ຄຳອະທິຖານຕ້ອງຖືກສ້າງຂຶ້ນບົນຄວາມສຸກໃນພຣະທຳຂອງພຣະເຈົ້າ, ມັນຕ້ອງຖືກສ້າງຂຶ້ນບົນພື້ນຖານຂອງການສື່ສານກັບພຣະເຈົ້າໃນພຣະທຳຂອງພຣະອົງ ແລະ ຫົວໃຈຕ້ອງສາມາດສະແຫວງຫາພຣະເຈົ້າ ແລະ ສະຫງົບງຽບຕໍ່ໜ້າພຣະອົງ. ຄຳອະທິຖານປະເພດນີ້ໄດ້ເຂົ້າສູ່ຂັ້ນຕອນການສື່ສານກັບພຣະເຈົ້າແລ້ວ.

ຄວາມຮູ້ພື້ນຖານທີ່ສຸດກ່ຽວກັບຄຳອະທິຖານ:

1. ຢ່າຫຼັບຫູຫຼັບຕາເວົ້າແມ່ນຫຍັງກໍ່ຕາມທີ່ອອກມາຈາກແນວຄິດ. ມັນຕ້ອງມີພາລະໃນຫົວໃຈຂອງເຈົ້າ ນັ້ນກໍ່ຄື ເຈົ້າຕ້ອງມີຈຸດປະສົງເມື່ອເຈົ້າອະທິຖານ.
2. ຄຳອະທິຖານຂອງເຈົ້າຕ້ອງປະກອບດ້ວຍພຣະທຳຂອງພຣະເຈົ້າ; ມັນຕ້ອງຕັ້ງຢູ່ບົນພຣະທຳຂອງພຣະເຈົ້າ.
3. ເມື່ອກຳລັງອະທິຖານ, ເຈົ້າບໍ່ຕ້ອງທົບທວນບັນຫາທີ່ຫຼ້າສະໄໝແລ້ວ. ຄຳອະທິຖານຂອງເຈົ້າຄວນກ່ຽວຂ້ອງກັບພຣະທຳໃນປັດຈຸບັນຂອງພຣະເຈົ້າ ແລະ ເມື່ອເຈົ້າອະທິຖານ, ໃຫ້ບອກພຣະເຈົ້າກ່ຽວກັບຄວາມຄິດທີ່ຢູ່ຂ້າງໃນສຸດຂອງເຈົ້າ.
4. ການອະທິຖານເປັນກຸ່ມຕ້ອງກ່ຽວກັບຈຸດສູນກາງ ເຊິ່ງຈຳເປັນຕ້ອງແມ່ນພາລະກິດຂອງພຣະວິນຍານບໍລິສຸດໃນປັດຈຸບັນ.
5. ທຸກຄົນຕ້ອງຮຽນຮູ້ຄຳອະທິຖານທີ່ຮ້ອງຂໍ. ນີ້ຍັງເປັນວິທີທີ່ຈະສະແດງຄວາມຄຳນຶງເຖິງຄວາມປະສົງຂອງພຣະເຈົ້າ.

ຊີວິດຄຳອະທິຖານຂອງຄົນໆໜຶ່ງແມ່ນອີງໃສ່ການເຂົ້າໃຈຄວາມໝາຍຂອງຄຳອະທິຖານ ແລະ ຄວາມຮູ້ພື້ນຖານຂອງຄຳອະທິຖານ. ໃນຊີວິດປະຈຳວັນ, ໃຫ້ອະທິຖານຢູ່ເລື້ອຍໆສຳລັບຂໍ້ບົກຜ່ອງຂອງເຈົ້າເອງ, ອະທິຖານເພື່ອກໍ່ໃຫ້ເກີດການປ່ຽນແປງໃນອຸປະນິໄສຂອງເຈົ້າໃນຊີວິດ ແລະ ອະທິຖານບົນພື້ນຖານຄວາມຮູ້ຂອງເຈົ້າກ່ຽວກັບພຣະທຳຂອງພຣະເຈົ້າ. ແຕ່ລະຄົນຄວນສ້າງຕັ້ງຊີວິດແຫ່ງຄຳອະທິຖານຂອງພວກເຂົາເອງ, ພວກເຂົາຄວນອະທິຖານເພື່ອເຫັນແກ່ການຮູ້ຈັກພຣະທຳຂອງພຣະເຈົ້າ ແລະ ພວກເຂົາຄວນອະທິຖານເພື່ອສະແຫວງຫາຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ. ເປີດເຜີຍສະຖານະການສ່ວນຕົວຂອງເຈົ້າຕໍ່ໜ້າພຣະເຈົ້າ ແລະ ເຮັດຕົວໃຫ້ເປັນຈິງໂດຍບໍ່ວິຕົກກັງວົນກ່ຽວກັບວິທີການທີ່ເຈົ້າອະທິຖານ ແລະ ບັນຫາຫຼັກກໍ່ຄືເພື່ອບັນລຸຄວາມເຂົ້າໃຈທີ່ແທ້ຈິງ ແລະ ເພື່ອຮັບເອົາປະສົບການຕົວຈິງກ່ຽວກັບພຣະທຳຂອງພຣະເຈົ້າ. ຄົນທີ່ສະແຫວງຫາເພື່ອເຂົ້າສູ່ຊີວິດຝ່າຍວິນຍານຕ້ອງສາມາດອະທິຖານໃນຫຼາຍວິທີທີ່ແຕກຕ່າງກັນ. ການອະທິຖານງຽບໆ, ການຄຸ່ນຄິດຕາມພຣະທຳ

ຂອງພຣະເຈົ້າ, ການມາຮູ້ຈັກພາລະກິດຂອງພຣະເຈົ້າ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຕົວຢ່າງຂອງພາລະກິດແຫ່ງການສົນທະນາຝ່າຍວິນຍານທີ່ມີເປົ້າໝາຍເພື່ອເຫັນແກ່ການບັນລຸທາງເຂົ້າສູ່ຊີວິດຝ່າຍວິນຍານທີ່ເປັນປົກກະຕິ ເຊິ່ງປັບປຸງສະພາວະຂອງຄົນໆໜຶ່ງທີ່ຢູ່ຕໍ່ໜ້າພຣະເຈົ້າ ແລະ ຍິ່ງຜັກດັນໃຫ້ຄົນໆໜຶ່ງກ້າວໜ້າຫຼາຍຂຶ້ນໃນຊີວິດ. ເວົ້າສັ້ນໆກໍ່ຄື ທຸກສິ່ງທີ່ເຈົ້າເຮັດ ບໍ່ວ່າມັນຈະເປັນການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າ ຫຼື ການອະທິຖານຢ່າງງຽບໆ ຫຼື ການປະກາດອອກດັງໆ ແມ່ນເພື່ອເຮັດໃຫ້ເຈົ້າສາມາດເຫັນເຖິງພຣະທຳຂອງພຣະເຈົ້າ, ພາລະກິດຂອງພຣະອົງ ແລະ ສິ່ງທີ່ພຣະອົງປາຖະໜາຈະບັນລຸໃນຕົວເຈົ້າຢ່າງຊັດເຈນ. ສິ່ງທີ່ສຳຄັນໄປກວ່ານັ້ນ ທຸກສິ່ງທີ່ເຈົ້າເຮັດແມ່ນເກີດຂຶ້ນເພື່ອບັນລຸມາດຕະຖານທີ່ພຣະເຈົ້າຮຽກຮ້ອງ ແລະ ເພື່ອຍົກຊີວິດຂອງເຈົ້າໃຫ້ສູງຂຶ້ນອີກ. ເງື່ອນໄຂຂັ້ນຕໍ່າທີ່ພຣະເຈົ້າຮຽກຮ້ອງຈາກມະນຸດກໍ່ຄືໃຫ້ມະນຸດສາມາດເປີດຫົວໃຈຂອງເຂົາຕໍ່ພຣະອົງ. ຖ້າມະນຸດມອບຫົວໃຈທີ່ແທ້ຈິງຂອງເຂົາໃຫ້ແກ່ພຣະເຈົ້າ ແລະ ເວົ້າສິ່ງທີ່ຢູ່ໃນຫົວໃຈຂອງເຂົາຢ່າງແທ້ຈິງ, ແລ້ວພຣະເຈົ້າກໍ່ເຕັມໃຈທີ່ຈະເຮັດພາລະກິດໃນເຂົາ. ສິ່ງທີ່ພຣະເຈົ້າປາຖະໜາບໍ່ແມ່ນຫົວໃຈທີ່ບິດງໍຂອງມະນຸດ, ແຕ່ເປັນຫົວໃຈທີ່ບໍລິສຸດ ແລະ ຊື່ສັດ. ຖ້າມະນຸດບໍ່ເວົ້າຈາກຫົວໃຈຂອງເຂົາຕໍ່ພຣະເຈົ້າ, ແລ້ວພຣະເຈົ້າກໍ່ຈະບໍ່ດົນບັນດານຫົວໃຈຂອງເຂົາ ຫຼື ເຮັດພາລະກິດໃນເຂົາ. ສະນັ້ນ, ປະເດັນສຳຄັນຂອງຄຳອະທິຖານກໍ່ຄືການເວົ້າກັບພຣະເຈົ້າຈາກຫົວໃຈຂອງເຈົ້າ, ບອກພຣະອົງກ່ຽວກັບຂໍ້ບົກຜ່ອງ ຫຼື ອຸປະນິໄສທີ່ກະບົດຂອງເຈົ້າ, ເປີດເຜີຍຕົນເອງຕໍ່ໜ້າພຣະອົງຢ່າງສົມບູນ; ມີແຕ່ເມື່ອນັ້ນ ພຣະເຈົ້າຈຶ່ງຈະສົນໃຈໃນຄຳອະທິຖານຂອງເຈົ້າ ຫຼື ຖ້າບໍ່ດັ່ງນັ້ນ ພຣະອົງກໍ່ຈະເຊື່ອງໃບໜ້າຂອງພຣະອົງຈາກເຈົ້າ. ເກນເງື່ອນໄຂຂັ້ນຕໍ່າສຳລັບຄຳອະທິຖານກໍ່ຄືເຈົ້າຕ້ອງສາມາດຮັກສາໃຫ້ຫົວໃຈຂອງເຈົ້າໃຫ້ສະຫງົບງຽບຢູ່ຕໍ່ໜ້າພຣະເຈົ້າ ແລະ ມັນຕ້ອງບໍ່ອອກຫ່າງຈາກພຣະເຈົ້າ. ມັນອາດເປັນໄປໄດ້ວ່າ ໃນລະຫວ່າງໄລຍະນີ້ ເຈົ້າບໍ່ໄດ້ຮັບຄວາມເຂົ້າໃຈໃໝ່ຂຶ້ນ ຫຼື ສູງສົ່ງຂຶ້ນ, ແຕ່ຫຼັງຈາກນັ້ນ ເຈົ້າຕ້ອງໃຊ້ຄຳອະທິຖານເພື່ອຮັກສາສະຖານະພາບໃນປັດຈຸບັນ ນັ້ນກໍ່ຄື ເຈົ້າຕ້ອງບໍ່ຖອຍຫຼັງ. ຢ່າງໜ້ອຍທີ່ສຸດເຈົ້າຕ້ອງບັນລຸສິ່ງນີ້ໃຫ້ໄດ້. ຖ້າເຈົ້າບໍ່ສາມາດເຮັດສຳເລັດແມ່ນແຕ່ສິ່ງນີ້, ແລ້ວມັນກໍ່ພິສູດວ່າຊີວິດຝ່າຍວິນຍານຂອງເຈົ້າບໍ່ໄດ້ຢູ່ໃນເສັ້ນທາງທີ່ຖືກຕ້ອງ. ຜົນຕາມມາກໍ່ຄື ເຈົ້າຈະບໍ່ສາມາດຍຶດໝັ້ນກັບນິມິດທີ່ເຈົ້າມີໃນຕອນທຳອິດ, ເຈົ້າຈະສູນເສຍຄວາມເຊື່ອໃນພຣະເຈົ້າ ແລະ ຄວາມຕັ້ງໃຈຂອງເຈົ້າຈະຫຼຸດລົງໃນພາຍຫຼັງ. ໜຶ່ງສັນຍານທີ່ບົ່ງບອກວ່າເຈົ້າໄດ້ເຂົ້າສູ່ຊີວິດຝ່າຍວິນຍານແລ້ວ ຫຼື ບໍ່ນັ້ນ ແມ່ນຕ້ອງເບິ່ງວ່າຄຳອະທິຖານຂອງເຈົ້າຢູ່ໃນເສັ້ນທາງທີ່ຖືກຕ້ອງ ຫຼື ບໍ່. ທຸກຄົນຕ້ອງເຂົ້າສູ່ຄວາມເປັນຈິງນີ້; ພວກເຂົາທຸກຄົນຕ້ອງເຮັດພາລະກິດແຫ່ງການຝຶກຝົນຕົນເອງຢ່າງມີສະຕິໃນຄຳອະທິຖານ, ບໍ່ແມ່ນລໍຖ້າຢ່າງຂີ້ຄ້ານ, ແຕ່ສະແຫວງຫາເພື່ອທີ່ຈະໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດຢ່າງມີສະຕິ. ມີແຕ່ເມື່ອນັ້ນພວກເຂົາຈຶ່ງຈະເປັນຄົນທີ່ສະແຫວງຫາພຣະເຈົ້າຢ່າງແທ້ຈິງ.

ເມື່ອເຈົ້າເລີ່ມອະທິຖານ, ຢ່າບັງຄັບຕົນເອງເກີນຄວາມຈຳເປັນ ແລະ ຄາດຫວັງທີ່ຈະບັນລຸທຸກສິ່ງໃນຄັ້ງດຽວ. ເຈົ້າບໍ່ສາມາດຮຽກຮ້ອງຢ່າງເກີນຕົວ ໂດຍຄາດຫວັງວ່າ ໃນທັນທີທີ່ເຈົ້າອ້າປາກຂອງເຈົ້າອອກ ເຈົ້າຈະຖືກດົນບັນດານໂດຍພຣະວິນຍານບໍລິສຸດ ຫຼື ເຈົ້າຈະໄດ້ຮັບແສງສະຫວ່າງ ແລະ ແສງ

ເຍືອງທາງ ຫຼື ພຣະເຈົ້າຈະຖອກເທຄວາມກະລຸນາລົງມາໃຫ້ເຈົ້າ. ສິ່ງນັ້ນຈະບໍ່ເກີດຂຶ້ນ; ພຣະເຈົ້າບໍ່ເຮັດສິ່ງທີ່ເໜືອທຳມະຊາດ. ພຣະເຈົ້າເຮັດໃຫ້ຄຳອະທິຖານຂອງຜູ້ຄົນກາຍເປັນຈິງໃນເວລາຂອງພຣະອົງເອງ ແລະ ບາງເທື່ອ ພຣະອົງກໍ່ທົດສອບຄວາມເຊື່ອຂອງເຈົ້າເພື່ອເບິ່ງວ່າເຈົ້າຈິ່ງຮັກພັກດີຕໍ່ໜ້າພຣະອົງ ຫຼື ບໍ່. ເມື່ອເຈົ້າອະທິຖານ, ເຈົ້າຕ້ອງມີຄວາມເຊື່ອ, ຄວາມພາກພຽນ ແລະ ຄວາມຕັ້ງໃຈ. ເມື່ອຫາກໍ່ເລີ່ມຕົ້ນຝຶກຝົນ, ຄົນສ່ວນໃຫຍ່ໝົດກຳລັງໃຈ ເພາະພວກເຂົາລົ້ມເຫຼວທີ່ຈະໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດ. ມັນຈະບໍ່ເປັນແບບນີ້! ເຈົ້າຕ້ອງພາກພຽນ; ເຈົ້າຕ້ອງໃຫ້ຄວາມສຳຄັນກັບການຮູ້ສຶກເຖິງການດົນບັນດານຈາກພຣະວິນຍານບໍລິສຸດ ແລະ ການສະແຫວງຫາ ແລະ ການຄົ້ນຫາ. ບາງເທື່ອ, ເສັ້ນທາງການປະຕິບັດຂອງເຈົ້າບໍ່ຖືກຕ້ອງ ແລະ ບາງເທື່ອ ແຮງຈູງໃຈສ່ວນຕົວ ແລະ ແນວຄິດຂອງເຈົ້າບໍ່ສາມາດຍຶດໝັ້ນໄດ້ຕໍ່ໜ້າພຣະເຈົ້າ ແລະ ດ້ວຍເຫດນັ້ນ ພຣະວິນຍານຂອງພຣະເຈົ້າກໍ່ລົ້ມເຫຼວທີ່ຈະດົນບັນດານເຈົ້າ. ໃນເວລາອື່ນ, ພຣະເຈົ້າຫຼຽວເບິ່ງວ່າເຈົ້າຈິ່ງຮັກພັກດີ ຫຼື ບໍ່. ເວົ້າສັ້ນໆກໍ່ຄື ໃນການຝຶກຝົນ ເຈົ້າຄວນຈ່າຍລາຄາທີ່ສູງຂຶ້ນ. ຖ້າເຈົ້າຄົ້ນພົບວ່າເຈົ້າກຳລັງຫັນເຫອອກຈາກເສັ້ນທາງປະຕິບັດຂອງເຈົ້າ, ເຈົ້າກໍສາມາດປ່ຽນວິທີການທີ່ເຈົ້າອະທິຖານໄດ້. ຕາບໃດທີ່ເຈົ້າສະແຫວງຫາດ້ວຍຫົວໃຈທີ່ຈິງໃຈ ແລະ ປາຖະໜາທີ່ຈະຮັບເອົາ, ແລ້ວພຣະວິນຍານບໍລິສຸດກໍ່ຈະພາເຈົ້າໄປສູ່ຄວາມເປັນຈິງນີ້ຢ່າງແນ່ນອນ. ບາງເທື່ອ ເຈົ້າອະທິຖານດ້ວຍຫົວໃຈທີ່ຈິງໃຈ ແຕ່ບໍ່ຮູ້ສຶກຄືກັບວ່າເຈົ້າໄດ້ຮັບການດົນບັນດານເປັນພິເສດ. ໃນເວລາແບບນີ້ ເຈົ້າຕ້ອງເພິ່ງພາຄວາມເຊື່ອ ໂດຍໄວ້ວາງໃຈວ່າພຣະເຈົ້າຈະເຝົ້າເບິ່ງຄຳອະທິຖານຂອງເຈົ້າ; ເຈົ້າຕ້ອງມີຄວາມພາກພຽນໃນຄຳອະທິຖານຂອງເຈົ້າ.

ໃຫ້ເປັນຄົນຊື່ສັດ; ອະທິຖານຫາພຣະເຈົ້າເພື່ອກຳຈັດການຫຼອກລວງທີ່ຢູ່ໃນຫົວໃຈຂອງເຈົ້າ. ຊຳລະຕົນເອງຜ່ານຄຳອະທິຖານຢູ່ຕະຫຼອດເວລາ, ຮັບເອົາການດົນບັນດານໃຈໂດຍພຣະວິນຍານຂອງພຣະເຈົ້າຜ່ານຄຳອະທິຖານ ແລະ ອຸປະນິໄສຂອງເຈົ້າຈະປ່ຽນແປງເທື່ອລະໜ້ອຍ. ຊີວິດຝ່າຍວິນຍານທີ່ແທ້ຈິງກໍ່ຄືຊີວິດແຫ່ງການອະທິຖານ, ມັນເປັນຊີວິດທີ່ໄດ້ຮັບການດົນບັນດານໂດຍພຣະວິນຍານບໍລິສຸດ. ຂະບວນການທີ່ຈະຖືກດົນບັນດານໂດຍພຣະວິນຍານບໍລິສຸດແມ່ນຂະບວນການປ່ຽນແປງອຸປະນິໄສຂອງມະນຸດ. ຊີວິດທີ່ບໍ່ໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດບໍ່ແມ່ນຊີວິດຝ່າຍວິນຍານ, ແຕ່ເປັນຊີວິດແຫ່ງພິທີກຳທາງສາສະໜາເທົ່ານັ້ນ. ມີພຽງແຕ່ຄົນທີ່ໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດ ແລະ ໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະວິນຍານບໍລິສຸດເລື້ອຍໆເທົ່ານັ້ນຈຶ່ງໄດ້ເຂົ້າສູ່ຊີວິດຝ່າຍວິນຍານ. ອຸປະນິໄສຂອງມະນຸດປ່ຽນແປງຢູ່ສະເໝີເມື່ອເຂົາອະທິຖານ. ຍິ່ງພຣະວິນຍານຂອງພຣະເຈົ້າດົນບັນດານໃຈເຂົາຫຼາຍສໍ່າໃດ, ເຂົາກໍ່ຍິ່ງຫ້າວຫັນ ແລະ ເຊື່ອຟັງຫຼາຍສໍ່ານັ້ນ. ແລ້ວດ້ວຍເຫດນັ້ນ ຫົວໃຈຂອງເຂົາຈຶ່ງຈະຖືກຊຳລະລ້າງເທື່ອລະໜ້ອຍ ແລະ ອຸປະນິໄສຂອງເຂົາຈະປ່ຽນແປງເທື່ອລະໜ້ອຍ. ສິ່ງດັ່ງກ່າວແມ່ນຜົນໄດ້ຮັບຈາກຄຳອະທິຖານທີ່ແທ້ຈິງ.

# ຮູ້ຈັກພາລະກິດໃໝ່ສຸດຂອງພຣະເຈົ້າ ແລະ ຕິດຕາມຮອຍພຣະບາດຂອງພຣະອົງ

ຕອນນີ້ ເຈົ້າຕ້ອງສະແຫວງຫາເພື່ອກາຍມາເປັນປະຊາຊົນຂອງພຣະເຈົ້າ ແລະ ຄວນເລີ່ມຕົ້ນເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຢ່າງສິ້ນເຊີງ. ການກາຍມາເປັນປະຊາຊົນຂອງພຣະເຈົ້າໝາຍເຖິງການເຂົ້າສູ່ຍຸກແຫ່ງລາຊະອານາຈັກ. ມື້ນີ້ ເຈົ້າເລີ່ມເຂົ້າສູ່ການຝຶກຝົນແຫ່ງອານາຈັກຢ່າງເປັນທາງການ ແລະ ຊີວິດໃນອະນາຄົດຂອງເຈົ້າກໍ່ຈະບໍ່ໂລເລ ແລະ ໄຮ້ລະບຽບດັ່ງທີ່ພວກເຂົາເປັນກ່ອນໜ້ານີ້; ເມື່ອດຳລົງຊີວິດໃນລັກສະນະນັ້ນ, ມັນເປັນໄປບໍ່ໄດ້ທີ່ຈະບັນລຸມາດຕະຖານທີ່ພຣະເຈົ້າຕ້ອງການ. ຖ້າເຈົ້າບໍ່ຮູ້ສຶກເຖິງຄວາມຮີບຮ້ອນໃດໆ ແລ້ວນີ້ກໍ່ສະແດງວ່າ ເຈົ້າບໍ່ມີຄວາມປາດຖະໜາທີ່ຈະປັບປຸງຕົນເອງ, ການສະແຫວງຫາຂອງເຈົ້າສັບສົນ ແລະ ວຸ້ນວາຍ ແລະ ເຈົ້າບໍ່ສາມາດເຮັດໃຫ້ຄວາມປະສົງຂອງພຣະເຈົ້າສຳເລັດໄດ້. ການເຂົ້າສູ່ການຝຶກອົບຮົມແຫ່ງອານາຈັກໝາຍເຖິງການເລີ່ມຕົ້ນຊີວິດຂອງປະຊາຊົນຂອງພຣະເຈົ້າ, ເຈົ້າເຕັມໃຈທີ່ຈະຍອມຮັບການຝຶກຝົນດັ່ງກ່າວບໍ? ເຈົ້າເຕັມໃຈທີ່ຈະຮູ້ສຶກເຖິງຄວາມຮີບດ່ວນບໍ? ເຈົ້າເຕັມໃຈທີ່ຈະມີຊີວິດຢູ່ພາຍໃຕ້ລະບຽບວິໄນຂອງພຣະເຈົ້າບໍ? ເຈົ້າເຕັມໃຈທີ່ຈະມີຊີວິດຢູ່ພາຍໃຕ້ການຕີສອນຂອງພຣະເຈົ້າບໍ? ເມື່ອພຣະທຳຂອງພຣະເຈົ້າມາເຖິງເຈົ້າ ແລະ ທົດສອບເຈົ້າ, ເຈົ້າຈະເຮັດແນວໃດ? ເຈົ້າຈະເຮັດຫຍັງແດ່ເມື່ອພົບກັບຂໍ້ແທ້ຈິງທຸກຮູບແບບ? ໃນອະດີດ ຄວາມສົນໃຈຂອງເຈົ້າບໍ່ແມ່ນກ່ຽວກັບຊີວິດ; ມື້ນີ້, ເຈົ້າຕ້ອງເຂົ້າສູ່ຄວາມເປັນຈິງແຫ່ງຊີວິດ ແລະ ສະແຫວງຫາການປ່ຽນແປງໃນຊີວິດຈິດໃຈຂອງເຈົ້າ. ນີ້ຄືສິ່ງທີ່ປະຊາຊົນໃນອານາຈັກຕ້ອງເຮັດໃຫ້ສຳເລັດ. ທຸກຄົນທີ່ເປັນປະຊາຊົນຂອງພຣະເຈົ້າຕ້ອງມີຊີວິດ, ພວກເຂົາຕ້ອງຍອມຮັບການຝຶກຝົນແຫ່ງອານາຈັກ ແລະ ສະແຫວງຫາການປ່ຽນແປງໃນຊີວິດຈິດໃຈຂອງພວກເຂົາ. ນີ້ຄືສິ່ງທີ່ພຣະເຈົ້າຕ້ອງການຈາກປະຊາຊົນໃນອານາຈັກ.

ສິ່ງທີ່ພຣະເຈົ້າຕ້ອງການຈາກປະຊາຊົນໃນອານາຈັກຄືດັ່ງລຸ່ມນີ້:

1. ພວກເຂົາຕ້ອງຍອມຮັບການຝາກຝັງຂອງພຣະເຈົ້າ. ນີ້ໝາຍຄວາມວ່າ ພວກເຂົາຕ້ອງຍອມຮັບພຣະທຳທຸກຂໍ້ທີ່ກ່າວໄວ້ໃນພາລະກິດແຫ່ງຍຸກສຸດທ້າຍຂອງພຣະເຈົ້າ.
2. ພວກເຂົາຕ້ອງເຂົ້າສູ່ການຝຶກຝົນແຫ່ງອານາຈັກ.
3. ພວກເຂົາຕ້ອງສະແຫວງຫາເພື່ອເຮັດໃຫ້ຫົວໃຈຂອງພວກເຂົາໄດ້ຮັບການສຳຜັດຈາກພຣະເຈົ້າ. ເມື່ອຫົວໃຈຂອງເຈົ້າໄດ້ຫັນມາຫາພຣະເຈົ້າຢ່າງສົມບູນ ແລະ ເຈົ້າມີຊີວິດຝ່າຍວິນຍານທີ່ທຳມະດາ ເຈົ້າກໍ່ຈະມີຊີວິດຢູ່ໃນດິນແດນແຫ່ງອິດສະຫຼະພາບ ເຊິ່ງໝາຍຄວາມວ່າ ເຈົ້າຈະມີຊີວິດຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຈາກຄວາມຮັກຂອງພຣະເຈົ້າ. ມີພຽງແຕ່ເມື່ອເຈົ້າມີຊີວິດພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະເຈົ້າ, ເຈົ້າຈຶ່ງຈະເປັນຂອງພຣະເຈົ້າ.
4. ພວກເຂົາຕ້ອງຖືກຮັບໂດຍພຣະເຈົ້າ.
5. ພວກເຂົາຕ້ອງກາຍມາເປັນສິ່ງທີ່ສຳແດງເຖິງສະຫງ່າລາສີຂອງພຣະເຈົ້າເທິງແຜ່ນດິນໂລກ.

ຫ້າຫົວຂໍ້ນີ້ແມ່ນການຝາກຝັງຂອງເຮົາສຳລັບເຈົ້າ. ພຣະທຳຂອງເຮົາຖືກກ່າວຕໍ່ປະຊາຊົນຂອງພຣະເຈົ້າ ແລະ ຖ້າເຈົ້າບໍ່ເຕັມໃຈຍອມຮັບເອົາການຝາກຝັງເຫຼົ່ານີ້, ເຮົາຈະບໍ່ບັງຄັບເຈົ້າ ແຕ່ຖ້າເຈົ້າຍອມຮັບສິ່ງເຫຼົ່ານັ້ນຢ່າງແທ້ຈິງ ແລ້ວເຈົ້າກໍ່ຈະສາມາດປະຕິບັດຄວາມປະສົງຂອງພຣະເຈົ້າໄດ້. ໃນປັດຈຸບັນ ເຈົ້າເລີ່ມຍອມຮັບການຝາກຝັງຂອງພຣະເຈົ້າ ແລະ ສະແຫວງຫາເພື່ອກາຍເປັນປະຊາຊົນຂອງອານາຈັກ ແລະ ບັນລຸຕາມມາດຕະຖານທີ່ຈຳເປັນສຳລັບປະຊາຊົນໃນອານາຈັກ. ນີ້ຄືບາດກ້າວທຳອິດຂອງທາງເຂົ້າ. ຖ້າເຈົ້າປາດຖະໜາປະຕິບັດຄວາມປະສົງຂອງພຣະເຈົ້າຢ່າງສົມບູນ ແລ້ວເຈົ້າຕ້ອງຍອມຮັບການຝາກຝັງທັງຫ້າເຫຼົ່ານີ້ ແລະ ຖ້າເຈົ້າສາມາດເຮັດຫ້າຂໍ້ນັ້ນໃຫ້ສຳເລັດໄດ້ ເຈົ້າກໍ່ຈະເປັນທີ່ພໍໃຈພຣະເຈົ້າ ແລະ ພຣະເຈົ້າຈະໃຊ້ເຈົ້າໃຫ້ເກີດປະໂຫຍດຢ່າງຍິ່ງໃຫຍ່ແນ່ນອນ. ສິ່ງທີ່ສຳຄັນໃນປັດຈຸບັນຄືການເຂົ້າສູ່ການຝຶກຝົນແຫ່ງອານາຈັກ. ການເຂົ້າສູ່ການຝຶກຝົນແຫ່ງອານາຈັກກ່ຽວພັນກັບຊີວິດທາງຝ່າຍວິນຍານ. ທີ່ຜ່ານມາແມ່ນບໍ່ມີການສົນທະນາກ່ຽວກັບຊີວິດຝ່າຍວິນຍານ ແຕ່ໃນປັດຈຸບັນ ເມື່ອເຈົ້າເລີ່ມເຂົ້າສູ່ການຝຶກຝົນແຫ່ງອານາຈັກ ເຈົ້າກໍ່ເຂົ້າສູ່ຊີວິດຝ່າຍວິນຍານຢ່າງເປັນທາງການ.

ຊີວິດຝ່າຍວິນຍານແມ່ນຊີວິດແບບໃດ? ຊີວິດຝ່າຍວິນຍານແມ່ນຊີວິດທີ່ຫົວໃຈຂອງເຈົ້າໄດ້ຫັນມາຫາພຣະເຈົ້າຢ່າງສົມບູນ ແລະ ສາມາດໃສ່ໃຈກັບຄວາມຮັກຂອງພຣະເຈົ້າ. ມັນເປັນຊີວິດທີ່ເຈົ້າດຳລົງຊີວິດຢູ່ໃນພຣະທຳຂອງພຣະເຈົ້າ ແລະ ບໍ່ມີສິ່ງໃດສາມາດຄອບຄອງຫົວໃຈຂອງເຈົ້າ ແລະ ເຈົ້າສາມາດເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າໃນປັດຈຸບັນ ແລະ ຖືກນຳພາໂດຍແສງສະຫວ່າງແຫ່ງພຣະວິນຍານບໍລິສຸດໃນປັດຈຸບັນເພື່ອເຮັດໜ້າທີ່ຂອງເຈົ້າໃຫ້ສຳເລັດ. ຊີວິດດັ່ງກ່າວລະຫວ່າງມະນຸດ ແລະ ພຣະເຈົ້າແມ່ນຊີວິດຝ່າຍວິນຍານ. ຖ້າເຈົ້າບໍ່ສາມາດປະຕິບັດຕາມແສງສະຫວ່າງຂອງປັດຈຸບັນ, ແລ້ວຄວາມສຳພັນຂອງເຈົ້າກັບພຣະເຈົ້າກໍ່ຈະເກີດມີຄວາມຫ່າງເຫີນກັນຂຶ້ນ, ມັນອາດເຖິງກັບແຕກຫັກ ແລະ ເຈົ້າຈະບໍ່ມີຊີວິດຝ່າຍວິນຍານທີ່ທຳມະດາ. ຄວາມສຳພັນທີ່ເປັນປົກກະຕິກັບພຣະເຈົ້າຖືກສ້າງຂຶ້ນບົນພື້ນຖານຂອງການຍອມຮັບເອົາພຣະທຳຂອງພຣະເຈົ້າໃນປັດຈຸບັນ. ເຈົ້າມີຊີວິດຝ່າຍວິນຍານທີ່ທຳມະດາບໍ? ເຈົ້າມີຄວາມສຳພັນກັບພຣະເຈົ້າຢ່າງເປັນປົກກະຕິບໍ? ເຈົ້າເປັນຄົນທີ່ປະຕິບັດຕາມພາລະກິດຂອງພຣະວິນຍານບໍລິສຸດບໍ? ຖ້າເຈົ້າສາມາດຕິດຕາມແສງສະຫວ່າງຂອງພຣະວິນຍານບໍລິສຸດໃນປັດຈຸບັນ ແລະ ສາມາດເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າພາຍໃນພຣະທຳຂອງພຣະອົງ ແລະ ເຂົ້າສູ່ພຣະທຳເຫຼົ່ານີ້ໄດ້ ແລ້ວເຈົ້າກໍ່ເປັນຄົນທີ່ຕິດຕາມກະແສຂອງພຣະວິນຍານບໍລິສຸດ. ຖ້າເຈົ້າບໍ່ຕິດຕາມກະແສຂອງພຣະວິນຍານບໍລິສຸດ ແລ້ວເຈົ້າກໍ່ເປັນຄົນທີ່ບໍ່ສະແຫວງຫາຄວາມຈິງໂດຍບໍ່ຕ້ອງສົງໄສ. ພຣະວິນຍານບໍລິສຸດບໍ່ມີໂອກາດທີ່ຈະປະຕິບັດພາລະກິດພາຍໃນຄົນທີ່ບໍ່ມີຄວາມປາດຖະໜາຢາກປັບປຸງຕົນເອງ ແລະ ຜົນຕາມມາກໍ່ຄື ຄົນເຫຼົ່ານັ້ນບໍ່ສາມາດຮວບຮວມກຳລັງຂອງພວກເຂົາຈັກເທື່ອ ແລະ ເປັນຄົນຂີ້ຄ້ານຢູ່ສະເໝີ. ໃນປັດຈຸບັນ ເຈົ້າຕິດຕາມກະແສຂອງພຣະວິນຍານບໍລິສຸດບໍ? ເຈົ້າຢູ່ໃນກະແສຂອງພຣະວິນຍານບໍລິສຸດບໍ? ເຈົ້າຫຼຸດພົ້ນຈາກສະພາວະທີ່ຂີ້ຄ້ານແລ້ວບໍ? ທຸກຄົນທີ່ເຊື່ອໃນພຣະທຳຂອງພຣະເຈົ້າ, ຄົນທີ່ຮັບເອົາພາລະກິດຂອງພຣະເຈົ້າເປັນພື້ນຖານ ແລະ ຕິດຕາມ

ແສງສະຫວ່າງຂອງພຣະວິນຍານບໍລິສຸດໃນປັດຈຸບັນ, ພວກເຂົາທຸກຄົນຢູ່ໃນກະແສຂອງພຣະວິນຍານບໍລິສຸດ. ຖ້າເຈົ້າເຊື່ອວ່າ ພຣະທຳຂອງພຣະເຈົ້ານັ້ນເປັນຈິງ ແລະ ຖືກຕ້ອງໂດຍບໍ່ມີຂໍ້ສົງໄສ ແລະ ຖ້າເຈົ້າເຊື່ອພຣະທຳຂອງພຣະເຈົ້າ ບໍ່ວ່າພຣະອົງຈະກ່າວຫຍັງກໍ່ຕາມ ແລ້ວເຈົ້າກໍ່ເປັນຄົນທີ່ສະແຫວງຫາການເຂົ້າສູ່ພາລະກິດຂອງພຣະເຈົ້າ ແລະ ດ້ວຍວິທີນີ້ ເຈົ້າຈຶ່ງເຮັດສຳເລັດຕາມຄວາມປະສົງຂອງພຣະເຈົ້າ.

ເພື່ອເຂົ້າສູ່ກະແສຂອງພຣະວິນຍານບໍລິສຸດ ເຈົ້າຕ້ອງມີຄວາມສຳພັນທີ່ເປັນປົກກະຕິກັບພຣະເຈົ້າ ແລະ ເຈົ້າຕ້ອງກຳຈັດສະພາວະທີ່ບໍ່ດົ້ນລົນໃຫ້ອອກຈາກຕົວເຈົ້າກ່ອນ. ບາງຄົນເຮັດຕາມຄົນສ່ວນຫຼາຍຢູ່ສະເໝີ ແລະ ຫົວໃຈຂອງພວກເຂົາກໍ່ຫ່າງເຫີນຈາກພຣະເຈົ້າຫຼາຍເກີນໄປ; ຄົນເຫຼົ່ານັ້ນບໍ່ມີຄວາມປາດຖະໜາທີ່ຈະປັບປຸງຕົນເອງ ແລະ ມາດຕະຖານທີ່ພວກເຂົາສະແຫວງຫາກໍ່ຕໍ່າເກີນໄປ. ມີພຽງແຕ່ການສະແຫວງຫາເພື່ອຮັກພຣະເຈົ້າ ແລະ ເພື່ອໃຫ້ພຣະເຈົ້າຮັບເອົາຈຶ່ງແມ່ນຄວາມປະສົງຂອງພຣະເຈົ້າ. ມີຄົນພຽງແຕ່ໃຊ້ຈິດສຳນຶກຂອງພວກເຂົາເພື່ອຕອບແທນຄວາມຮັກຂອງພຣະເຈົ້າ, ແຕ່ສິ່ງນີ້ບໍ່ສາມາດບັນລຸຕາມຄວາມປະສົງຂອງພຣະເຈົ້າໄດ້; ຍິ່ງມາດຕະຖານທີ່ເຈົ້າສະແຫວງຫາສູງພຽງໃດ ມັນກໍ່ຈະຍິ່ງສອດຄ່ອງກັບຄວາມປະສົງຂອງພຣະເຈົ້າຫຼາຍພຽງນັ້ນ. ສຳລັບຄົນທີ່ເປັນຄົນທຳມະດາ ແລະ ຄົນທີ່ພະຍາຍາມຮັກພຣະເຈົ້າ, ການເຂົ້າສູ່ອານາຈັກເພື່ອກາຍມາໜຶ່ງໃນເປັນປະຊາຊົນຂອງພຣະເຈົ້າຄືອະນາຄົດທີ່ແທ້ຈິງຂອງເຈົ້າ ແລະ ເປັນຊີວິດທີ່ມີຄຸນຄ່າ ແລະ ຄວາມໝາຍທີ່ສຸດ; ບໍ່ມີໃຜທີ່ໄດ້ຮັບການອວຍພອນຫຼາຍໄປກວ່າເຈົ້າອີກແລ້ວ. ເປັນຫຍັງເຮົາຈຶ່ງເວົ້າແບບນີ້? ຍ້ອນວ່າຄົນທີ່ບໍ່ເຊື່ອພຣະເຈົ້າມີຊີວິດເພື່ອເນື້ອໜັງ ແລະ ພວກເຂົາມີຊີວິດເພື່ອຊາຕານ, ແຕ່ມື້ນີ້ ເຈົ້າມີຊີວິດຢູ່ເພື່ອພຣະເຈົ້າ ແລະ ມີຊີວິດຢູ່ເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ນັ້ນຄືເຫດຜົນທີ່ເຮົາກ່າວວ່າ ຊີວິດຂອງເຈົ້າແມ່ນມີຄວາມໝາຍທີ່ສຸດ. ມີພຽງແຕ່ຄົນກຸ່ມນີ້ ເຊິ່ງເປັນຄົນທີ່ຖືກຄັດເລືອກໂດຍພຣະເຈົ້າຈຶ່ງສາມາດດຳລົງຊີວິດທີ່ມີຄວາມໝາຍທີ່ສຸດໄດ້: ບໍ່ມີໃຜເທິງແຜ່ນດິນໂລກທີ່ສາມາດດຳລົງຊີວິດທີ່ມີຄຸນຄ່າ ແລະ ຄວາມໝາຍແບບນັ້ນໄດ້. ຍ້ອນເຈົ້າຖືກຄັດເລືອກໂດຍພຣະເຈົ້າ ແລະ ຖືກພຣະເຈົ້າຍົກຂຶ້ນ ແລະ ຍິ່ງໄປກວ່ານັ້ນ ຍ້ອນຄວາມຮັກທີ່ພຣະເຈົ້າມີໃຫ້ກັບເຈົ້າ, ເຈົ້າຈຶ່ງໄດ້ເຂົ້າໃຈຊີວິດຢ່າງແທ້ຈິງ ແລະ ຮູ້ຈັກໃຊ້ຊີວິດທີ່ມີຄຸນຄ່າທີ່ສຸດ. ນີ້ບໍ່ແມ່ນຍ້ອນການສະແຫວງຫາຂອງເຈົ້ານັ້ນດີ ແຕ່ຍ້ອນພຣະຄຸນຂອງພຣະເຈົ້າ; ຍ້ອນພຣະເຈົ້າເປັນຜູ້ທີ່ເປີດຕາແຫ່ງຈິດວິນຍານຂອງເຈົ້າ ແລະ ນັ້ນຄືພຣະວິນຍານຂອງພຣະເຈົ້າທີ່ສຳຜັດຫົວໃຈຂອງເຈົ້າ ໂດຍມອບໂອກາດທີ່ດີໃຫ້ເຈົ້າໄດ້ມາຢູ່ຕໍ່ໜ້າພຣະອົງ. ຖ້າພຣະວິນຍານຂອງພຣະເຈົ້າບໍ່ໃຫ້ສ່ອງແສງໃຫ້ແກ່ເຈົ້າ, ແລ້ວເຈົ້າຈະບໍ່ສາມາດເຫັນໃນສິ່ງທີ່ງົດງາມກ່ຽວກັບພຣະເຈົ້າໄດ້ ຫຼື ມັນເປັນໄປບໍ່ໄດ້ທີ່ເຈົ້າຈະຮັກພຣະເຈົ້າ. ທັງໝົດນີ້ກໍ່ຍ້ອນພຣະວິນຍານຂອງພຣະເຈົ້າໄດ້ສຳຜັດຫົວໃຈຂອງຄົນ ເຊິ່ງເຮັດໃຫ້ຫົວໃຈຂອງພວກເຂົາຫັນມາຫາພຣະເຈົ້າ. ບາງເທື່ອ ເມື່ອເຈົ້າກຳລັງຊື່ນຊົມກັບພຣະທຳຂອງພຣະເຈົ້າ ຈິດວິນຍານຂອງເຈົ້າໄດ້ສຳຜັດ ແລະ ເຈົ້າຮູ້ສຶກວ່າ ເຈົ້າບໍ່ສາມາດເຮັດຫຍັງໄດ້ນອກຈາກຮັກພຣະເຈົ້າ, ມີກຳລັງແຮງກ້າທີ່ໃຫຍ່ຫຼວງພາຍໃນຕົວເຈົ້າ ແລະ ບໍ່ມີສິ່ງໃດທີ່ເຈົ້າບໍ່ສາມາດປ່ອຍວາງໄດ້. ຖ້າເຈົ້າຮູ້ສຶກແບບນີ້, ແລ້ວເຈົ້າແມ່ນໄດ້ຖືກພຣະວິນຍານຂອງພຣະເຈົ້າສຳຜັດ

ແລະ ຫົວໃຈຂອງເຈົ້າໄດ້ຫັນມາຫາພຣະເຈົ້າຢ່າງສົມບູນ ແລະ ເຈົ້າຈະອະທິຖານຫາພຣະເຈົ້າ ແລະ ກ່າວວ່າ: "ໂອ ພຣະເຈົ້າ! ພວກຂ້ານ້ອຍໄດ້ຖືກກຳນົດຊະຕາໄວ້ລ່ວງໜ້າ ແລະ ຖືກເລືອກໂດຍພຣະອົງຢ່າງແທ້ຈິງ. ສະຫງ່າລາສີຂອງພຣະອົງມອບຄວາມພາກພູມໃຈໃຫ້ແກ່ຂ້ານ້ອຍ ແລະ ຂ້ານ້ອຍຮູ້ສຶກເປັນກຽດທີ່ໄດ້ເປັນໜຶ່ງໃນປະຊາຊົນຄົນຂອງພຣະອົງ. ຂ້ານ້ອຍຈະສະຫຼະທຸກສິ່ງ ແລະ ມອບທຸກຢ່າງເພື່ອປະຕິບັດຕາມຄວາມປະສົງຂອງພຣະອົງ ແລະ ຈະອຸທິດເວລາໝົດປີຂອງຂ້ານ້ອຍ ແລະ ຕະຫຼອດຊີວິດໃຫ້ກັບພຣະອົງ". ເມື່ອເຈົ້າອະທິຖານແບບນີ້, ມັນກໍ່ຈະມີຄວາມຮັກທີ່ບໍ່ສິ້ນສຸດ ແລະ ຄວາມເຊື່ອຟັງທີ່ແທ້ຈິງຕໍ່ພຣະເຈົ້າໃນຫົວໃຈຂອງເຈົ້າ. ເຈົ້າເຄີຍມີປະສົບການດັ່ງກ່າວນີ້ບໍ? ຖ້າຄົນມັກໄດ້ຮັບການສຳຜັດຈາກພຣະວິນຍານຂອງພຣະເຈົ້າຢູ່ຕະຫຼອດ, ແລ້ວພວກເຂົາກໍ່ເຕັມໃຈເປັນພິເສດທີ່ຈະອຸທິດຕົນເອງຕໍ່ພຣະເຈົ້າດ້ວຍຄຳອະທິຖານຂອງພວກເຂົາ: "ໂອ ພຣະເຈົ້າ! ຂ້ານ້ອຍປາຖະໜາທີ່ຈະເຫັນມື້ແຫ່ງຄວາມສະຫງ່າລາສີຂອງພຣະອົງ ແລະ ຂ້ານ້ອຍປາຖະໜາທີ່ຈະມີຊີວິດຢູ່ເພື່ອພຣະອົງ, ບໍ່ມີສິ່ງໃດທີ່ມີຄ່າ ຫຼື ມີຄວາມໝາຍໄປກວ່າການມີຊີວິດຢູ່ເພື່ອພຣະອົງ ແລະ ຂ້ານ້ອຍບໍ່ມີຄວາມປາຖະໜາແມ່ນແຕ່ໜ້ອຍດຽວທີ່ຈະມີຊີວິດຢູ່ເພື່ອຊາຕານ ແລະ ເນື້ອໜັງ. ພຣະອົງຍົກຂ້ານ້ອຍຂຶ້ນໂດຍເຮັດໃຫ້ຂ້ານ້ອຍສາມາດມີຊີວິດຢູ່ເພື່ອພຣະອົງໄດ້ໃນມື້ນີ້". ເມື່ອເຈົ້າໄດ້ອະທິຖານໃນລັກສະນະນີ້ ເຈົ້າກໍ່ຈະຮູ້ສຶກວ່າ ເຈົ້າບໍ່ສາມາດເຮັດຫຍັງໄດ້ນອກຈາກມອບຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າ, ເຈົ້າຕ້ອງຮັບເອົາພຣະເຈົ້າ ແລະ ໃນຂະນະທີ່ເຈົ້າມີຊີວິດຢູ່ ເຈົ້າບໍ່ຢາກຕາຍຖ້າບໍ່ໄດ້ຮັບເອົາພຣະເຈົ້າເທື່ອ. ເມື່ອກ່າວຄຳອະທິຖານແບບນັ້ນ ມັນກໍ່ຈະມີກຳລັງທີ່ບໍ່ຮູ້ຈັກໝົດພາຍໃນຕົວເຈົ້າ ແລະ ເຈົ້າຈະບໍ່ຮູ້ວ່າມັນມາຈາກໃສ; ໃນຫົວໃຈຂອງເຈົ້າ ມັນຈະມີລິດອຳນາດທີ່ບໍ່ມີຂີດຈຳກັດ ແລະ ເຈົ້າຈະມີຄວາມຮູ້ສຶກວ່າພຣະເຈົ້າເປັນຕາຮັກຫຼາຍ ແລະ ພຣະອົງເໝາະສົມກັບຄວາມຮັກ. ນີ້ແມ່ນເວລາທີ່ເຈົ້າຈະໄດ້ຮັບການສຳຜັດຈາກພຣະເຈົ້າ. ທຸກຄົນທີ່ມີປະສົບການດັ່ງກ່າວແມ່ນໄດ້ຮັບການສຳຜັດຈາກພຣະເຈົ້າ. ສຳລັບຄົນທີ່ມັກໄດ້ຮັບການສຳຜັດຈາກພຣະເຈົ້າ ການປ່ຽນແປງກໍ່ຈະເກີດຂຶ້ນໃນຊີວິດຂອງພວກເຂົາ, ພວກເຂົາສາມາດຕັ້ງໃຈ ແລະ ເຕັມໃຈທີ່ຈະຮັບພຣະເຈົ້າຢ່າງສົມບູນ; ຄວາມຮັກຕໍ່ພຣະເຈົ້າທີ່ມີຢູ່ໃນຫົວໃຈຂອງພວກເຂົາກໍ່ເຂັ້ມແຂງຂຶ້ນ ແລະ ຫົວໃຈຂອງພວກເຂົາກໍ່ຫັນມາຫາພຣະເຈົ້າຢ່າງສົມບູນ, ພວກເຂົາບໍ່ສົນໃຈຄອບຄົວ, ໂລກ, ຄວາມຫຍຸ້ງຍາກ ຫຼື ອະນາຄົດຂອງພວກເຂົາ ແລະ ພວກເຂົາເຕັມໃຈທີ່ຈະອຸທິດຄວາມພະຍາຍາມຕະຫຼອດຊີວິດໃຫ້ກັບພຣະເຈົ້າ. ທຸກຄົນທີ່ໄດ້ຮັບການສຳຜັດຈາກພຣະວິນຍານຂອງພຣະເຈົ້າກໍ່ເປັນຄົນທີ່ສະແຫວງຫາຄວາມຈິງ ແລະ ຄົນທີ່ມີຄວາມຫວັງທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ.

ເຈົ້າໄດ້ມອບຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າແລ້ວບໍ? ຫົວໃຈຂອງເຈົ້າໄດ້ຮັບການສຳຜັດຈາກພຣະວິນຍານຂອງພຣະເຈົ້າແລ້ວບໍ? ຖ້າເຈົ້າບໍ່ເຄີຍມີປະສົບການດັ່ງກ່າວ ແລະ ຖ້າເຈົ້າບໍ່ເຄີຍອະທິຖານແບບນີ້ຈັກເທື່ອ, ແລ້ວນີ້ກໍ່ສະແດງວ່າ ພຣະເຈົ້າບໍ່ມີທີ່ຢູ່ໃນຫົວໃຈຂອງເຈົ້າເລີຍ. ທຸກຄົນທີ່ຮັບການນຳພາຈາກພຣະວິນຍານຂອງພຣະເຈົ້າ ແລະ ຄົນທີ່ໄດ້ຮັບການສຳຜັດຈາກພຣະວິນຍານຂອງພຣະເຈົ້າແມ່ນມີພາລະກິດຂອງພຣະເຈົ້າ ເຊິ່ງສະແດງໃຫ້ເຫັນວ່າ ພຣະທຳຂອງພຣະເຈົ້າ ແລະ ຄວາມຮັກຂອງພຣະເຈົ້າ

ໄດ້ຝັງເລິກຢູ່ພາຍໃນຕົວພວກເຂົາ. ບາງຄົນເວົ້າວ່າ: "ຂ້ານ້ອຍບໍ່ຈິງໃຈໃນຄຳອະທິຖານຄືກັບທ່ານ ຫຼື ຂ້ານ້ອຍບໍ່ໄດ້ຮັບການສຳຜັດຈາກພຣະເຈົ້າຫຼາຍ; ແຕ່ບາງເທື່ອ ເມື່ອຂ້ານ້ອຍຕັ້ງສະມາທິ ແລະ ອະທິຖານ, ຂ້ານ້ອຍກໍ່ຮູ້ສຶກວ່າ ພຣະເຈົ້າເປັນຕາຮັກ ແລະ ຫົວໃຈຂອງຂ້ານ້ອຍກໍ່ໄດ້ຮັບການສຳຜັດຈາກພຣະເຈົ້າ". ບໍ່ມີຫຍັງທີ່ສຳຄັນໄປກວ່າຫົວໃຈຂອງມະນຸດ. ເມື່ອຫົວໃຈຂອງເຈົ້າໄດ້ຫັນມາຫາພຣະເຈົ້າ, ການເປັນຢູ່ທັງໝົດຂອງເຈົ້າກໍ່ຈະຫັນມາຫາພຣະເຈົ້າ ແລະ ໃນເວລານັ້ນ ຫົວໃຈຂອງເຈົ້າຈະໄດ້ຮັບການສຳຜັດຈາກພຣະວິນຍານຂອງພຣະເຈົ້າ. ພວກເຈົ້າສ່ວນຫຼາຍໄດ້ມີປະສົບການດັ່ງກ່າວ, ມັນເປັນພຽງແຕ່ວ່າຄວາມເລິກເຊິ່ງໃນປະສົບການຂອງພວກເຈົ້າແມ່ນບໍ່ຄືກັນ. ບາງຄົນກ່າວວ່າ: "ຂ້ານ້ອຍບໍ່ກ່າວຄຳອະທິຖານຫຼາຍ, ຂ້ານ້ອຍພຽງແຕ່ຟັງການສົນທະນາຂອງຄົນອື່ນ ແລະ ກຳລັງກໍ່ເພີ່ມຂຶ້ນໃນຕົວຂ້ານ້ອຍ". ສິ່ງນີ້ສະແດງໃຫ້ເຫັນວ່າ ເຈົ້າໄດ້ຮັບການສຳຜັດຈາກພຣະເຈົ້າຢູ່ພາຍໃນ. ຄົນທີ່ໄດ້ຮັບການສຳຜັດຈາກພຣະເຈົ້າຢູ່ພາຍໃນໄດ້ຮັບການດົນບັນດານ ເມື່ອພວກເຂົາໄດ້ຍິນການສົນທະນາຂອງຄົນອື່ນ; ຖ້າຫົວໃຈຂອງຄົນໜຶ່ງທີ່ບໍ່ມີໄດ້ຮັບການສຳຜັດຫຍັງເລີຍເມື່ອພວກເຂົາໄດ້ຍິນພຣະທຳທີ່ກະຕຸ້ນ, ແລ້ວສິ່ງນີ້ພິສູດວ່າພາລະກິດແຫ່ງພຣະວິນຍານບໍລິສຸດບໍ່ໄດ້ຢູ່ພາຍໃນຕົວພວກເຂົາ. ບໍ່ມີຄວາມປາດຖະໜາໃນຕົວພວກເຂົາ ເຊິ່ງພິສູດໃຫ້ເຫັນວ່າ ພວກເຂົາບໍ່ມີຄວາມຕັ້ງໃຈ ແລະ ດ້ວຍເຫດນັ້ນ ພວກເຂົາກໍ່ປາສະຈາກພາລະກິດຂອງພຣະວິນຍານບໍລິສຸດ. ຖ້າຄົນໃດໄດ້ຮັບການສຳຜັດຈາກພຣະເຈົ້າ, ພວກເຂົາກໍ່ຈະມີປະຕິກິລິຍາເມື່ອພວກເຂົາໄດ້ຍິນພຣະທຳຂອງພຣະເຈົ້າ; ຖ້າພວກເຂົາບໍ່ໄດ້ຮັບການສຳຜັດຈາກພຣະເຈົ້າ ແລ້ວພວກເຂົາກໍ່ບໍ່ຜູກພັນກັບພຣະທຳຂອງພຣະເຈົ້າ, ພວກເຂົາບໍ່ມີຄວາມກ່ຽວຂ້ອງກັບພຣະທຳເຫຼົ່ານັ້ນ ແລະ ພວກເຂົາບໍ່ສາມາດໄດ້ຮັບແສງສະຫວ່າງ. ຄົນທີ່ໄດ້ຍິນພຣະທຳຂອງພຣະເຈົ້າ ແລະ ບໍ່ມີປະຕິກິລິຍາຫຍັງເລີຍແມ່ນຄົນທີ່ຍັງບໍ່ໄດ້ຮັບການສຳຜັດຈາກພຣະເຈົ້າ, ພວກເຂົາເປັນຄົນທີ່ປາສະຈາກພາລະກິດຂອງພຣະວິນຍານບໍລິສຸດ. ທຸກຄົນທີ່ສາມາດຍອມຮັບແສງສະຫວ່າງໃໝ່ແມ່ນໄດ້ຮັບການສຳຜັດ ແລະ ມີພາລະກິດຂອງພຣະວິນຍານບໍລິສຸດ.

ໃຫ້ວັດແທກຕົວເຈົ້າເອງ:

1. ເຈົ້າຢູ່ທ່າມກາງພາລະກິດປັດຈຸບັນຂອງພຣະວິນຍານບໍລິສຸດບໍ?
2. ຫົວໃຈຂອງເຈົ້າຫັນມາຫາພຣະເຈົ້າແລ້ວບໍ? ເຈົ້າໄດ້ຮັບການສຳຜັດຈາກພຣະເຈົ້າແລ້ວບໍ?
3. ພຣະທຳຂອງພຣະເຈົ້າຝັງເລິກໃນຕົວເຈົ້າແລ້ວບໍ?
4. ການປະຕິບັດຂອງເຈົ້າແມ່ນຖືກສ້າງຂຶ້ນບົນພື້ນຖານແຫ່ງຄວາມຕ້ອງການຂອງພຣະເຈົ້າບໍ?
5. ເຈົ້າມີຊີວິດຢູ່ພາຍໃຕ້ການນຳພາຂອງແສງສະຫວ່າງໃນປັດຈຸບັນຂອງພຣະວິນຍານບໍລິສຸດບໍ?
6. ຫົວໃຈຂອງເຈົ້າຖືກປົກຄອງໂດຍແນວຄວາມຄິດເກົ່າໆ ຫຼື ມັນຖືກປົກຄອງໂດຍພຣະທຳຂອງພຣະເຈົ້າໃນປັດຈຸບັນ?

ເມື່ອໄດ້ຍິນພຣະທຳເຫຼົ່ານີ້ແລ້ວ, ເຈົ້າມີປະຕິກິລິຍາຫຍັງແດ່ພາຍໃນຕົວຂອງເຈົ້າ? ຫຼັງຈາກທີ່ໄດ້ເຊື່ອມາເປັນເວລາຫຼາຍປີ, ເຈົ້າມີພຣະທຳຂອງພຣະເຈົ້າເປັນຊີວິດຂອງເຈົ້າບໍ? ໄດ້ມີການປ່ຽນແປງໃນອຸປະນິໄສທີ່ເສື່ອມໂຊມກ່ອນໜ້າຂອງເຈົ້າບໍ? ອີງຕາມພຣະທຳຂອງພຣະເຈົ້າໃນປັດຈຸບັນ, ເຈົ້າຮູ້ບໍວ່າ

ການມີຊີວິດແມ່ນຫຍັງ ແລະ ການບໍ່ມີຊີວິດແມ່ນຫຍັງ? ສິ່ງນີ້ຊັດເຈນກັບເຈົ້າແລ້ວບໍ? ຄວາມສຳຄັນຫຼັກໃນການຕິດຕາມພຣະເຈົ້າກໍ່ຄື ທຸກສິ່ງຄວນເປັນໄປຕາມພຣະທຳຂອງພຣະເຈົ້າໃນປັດຈຸບັນ: ບໍ່ວ່າເຈົ້າກຳລັງສະແຫວງຫາເພື່ອເຂົ້າສູ່ຊີວິດ ຫຼື ເພື່ອເຮັດໃຫ້ຄວາມປະສົງຂອງພຣະເຈົ້າສຳເລັດ, ທຸກສິ່ງຄວນຕັ້ງຢູ່ໃນພຣະທຳຂອງພຣະເຈົ້າໃນປັດຈຸບັນ. ຖ້າສິ່ງທີ່ເຈົ້າສົນທະນາ ແລະ ສະແຫວງຫາບໍ່ໄດ້ຕັ້ງຢູ່ໃນພຣະທຳຂອງພຣະເຈົ້າໃນປັດຈຸບັນ ແລ້ວເຈົ້າກໍ່ເປັນຄົນແປກໜ້າສຳລັບພຣະທຳຂອງພຣະເຈົ້າ ແລະ ຈະຖືກປ່ອຍປະໂດຍພາລະກິດຂອງພຣະວິນຍານບໍລິສຸດຢ່າງສິ້ນເຊີງ. ຄົນທີ່ພຣະເຈົ້າຕ້ອງການແມ່ນຄົນທີ່ຕິດຕາມບາດກ້າວຂອງພຣະອົງ. ບໍ່ວ່າສິ່ງທີ່ເຈົ້າເຂົ້າໃຈກ່ອນໜ້ານີ້ຈະອັດສະຈັນ ແລະ ບໍລິສຸດພຽງໃດກໍ່ຕາມ, ພຣະເຈົ້າບໍ່ຕ້ອງການມັນ ແລະ ຖ້າເຈົ້າບໍ່ສາມາດປະວາງສິ່ງເຫຼົ່ານັ້ນໄວ້ ແລ້ວພວກມັນກໍ່ຈະເປັນອຸປະສັກທີ່ໃຫຍ່ຫຼວງໃນທາງເຂົ້າຂອງເຈົ້າໃນອະນາຄົດ. ທຸກຄົນທີ່ສາມາດປະຕິບັດຕາມແສງສະຫວ່າງໃນປັດຈຸບັນຂອງພຣະວິນຍານບໍລິສຸດກໍ່ໄດ້ຮັບການອວຍພອນ. ປະຊາຊົນໃນຍຸກຜ່ານມາຍັງຕິດຕາມບາດກ້າວຂອງພຣະເຈົ້າອີກດ້ວຍ ແຕ່ພວກເຂົາບໍ່ສາມາດຕິດຕາມຈົນຮອດປັດຈຸບັນ; ນີ້ຄືຮັບພອນສຳລັບປະຊາຊົນໃນຍຸກສຸດທ້າຍ. ຄົນທີ່ສາມາດຕິດຕາມພາລະກິດໃນປັດຈຸບັນຂອງພຣະວິນຍານບໍລິສຸດ ແລະ ຄົນທີ່ສາມາດຕິດຕາມບາດກ້າວຂອງພຣະເຈົ້າຈົນພວກເຂົາຕິດ ຕາມພຣະເຈົ້າບໍ່ວ່າພຣະອົງຈະນຳພາພວກເຂົາໄປໃສກໍ່ຕາມ, ຄົນເຫຼົ່ານີ້ແມ່ນຄົນທີ່ໄດ້ຮັບພອນຈາກພຣະເຈົ້າ. ຄົນທີ່ບໍ່ຕິດຕາມພາລະກິດໃນປັດຈຸບັນຂອງພຣະວິນຍານບໍລິສຸດແມ່ນບໍ່ໄດ້ເຂົ້າສູ່ພາລະກິດແຫ່ງພຣະທຳຂອງພຣະເຈົ້າ ແລະ ບໍ່ວ່າພວກເຂົາຈະປະຕິບັດພາລະກິດໜັກພຽງໃດກໍ່ຕາມ ຫຼື ການທົນທຸກຂອງພວກເຂົາມີຫຼາຍພຽງໃດກໍ່ຕາມ ຫຼື ພວກເຂົາດີ້ນຮົນຫຼາຍພຽງໃດກໍ່ຕາມ, ບໍ່ມີສິ່ງໃດທີ່ມີຄວາມໝາຍຕໍ່ພຣະເຈົ້າເລີຍ ແລະ ພຣະອົງຈະບໍ່ຍົກຍ້ອງພວກເຂົາ. ໃນປັດຈຸບັນ ທຸກຄົນທີ່ຕິດຕາມພຣະທຳຂອງພຣະເຈົ້າໃນປັດຈຸບັນແມ່ນຢູ່ໃນກະແສຂອງພຣະວິນຍານບໍລິສຸດ; ຄົນທີ່ເປັນຄົນແປກໜ້າໃນພຣະທຳຂອງພຣະເຈົ້າໃນປັດຈຸບັນແມ່ນຢູ່ນອກຂອງກະແສຂອງພຣະວິນຍານບໍລິສຸດ ແລະ ຄົນດັ່ງກ່າວບໍ່ໄດ້ຮັບການຍົກຍ້ອງຈາກພຣະເຈົ້າ. ການຮັບໃຊ້ທີ່ແຍກອອກຈາກຖ້ອຍຄຳໃນປັດຈຸບັນຂອງພຣະວິນຍານບໍລິສຸດແມ່ນການຮັບໃຊ້ທີ່ເກີດຈາກເນື້ອໜັງ ແລະ ເກີດຈາກແນວຄວາມຄິດ ແລະ ມັນເປັນໄປບໍ່ໄດ້ທີ່ຈະສອດຄ່ອງກັບຄວາມປະສົງຂອງພຣະເຈົ້າໄດ້. ຖ້າຄົນມີຊີວິດທ່າມກາງແນວຄວາມຄິດທາງສາສະໜາ, ແລ້ວພວກເຂົາກໍ່ບໍ່ສາມາດເຮັດສິ່ງໃດໜຶ່ງທີ່ເໝາະສົມກັບຄວາມປະສົງຂອງພຣະເຈົ້າ ແລະ ເຖິງແມ່ນວ່າພວກເຂົາຈະຮັບໃຊ້ພຣະເຈົ້າ, ພວກເຂົາກໍ່ຮັບໃຊ້ໃນທ່າມກາງຈິນຕະນາການ ແລະ ແນວຄວາມຄິດຂອງພວກເຂົາ ແລະ ບໍ່ສາມາດຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າທັງໝົດ. ຄົນທີ່ບໍ່ສາມາດຕິດຕາມພາລະກິດຂອງພຣະວິນຍານບໍລິສຸດກໍ່ບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຄົນທີ່ບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າກໍ່ບໍ່ສາມາດຮັບໃຊ້ພຣະເຈົ້າໄດ້. ພຣະເຈົ້າຕ້ອງການການຮັບໃຊ້ທີ່ເປັນໄປຕາມຫົວໃຈຂອງພຣະອົງເອງ; ພຣະອົງບໍ່ຕ້ອງການການຮັບໃຊ້ທີ່ເກີດຈາກແນວຄວາມຄິດ ແລະ ເນື້ອໜັງ. ຖ້າຄົນບໍ່ສາມາດຕິດຕາມບາດກ້າວໃນພາລະກິດຂອງພຣະວິນຍານບໍລິສຸດໄດ້ ແລ້ວພວກເຂົາກໍ່ມີຊີວິດຢູ່ທ່າມກາງແນວຄິດຕ່າງໆ. ການຮັບໃຊ້ຂອງຄົນດັ່ງກ່າວຂັດຂວາງ

ແລະ ລົບກວນ ແລະ ການຮັບໃຊ້ດັ່ງກ່າວຢູ່ກົງກັນຂ້າມກັບພຣະເຈົ້າ. ສະນັ້ນ ຄົນທີ່ບໍ່ສາມາດຕິດຕາມບາດກ້າວຂອງພຣະເຈົ້າບໍ່ສາມາດຮັບໃຊ້ພຣະເຈົ້າໄດ້; ຄົນທີ່ບໍ່ສາມາດຕິດຕາມບາດກ້າວຂອງພຣະເຈົ້າກໍ່ຕໍ່ຕ້ານພຣະເຈົ້າຢ່າງແນ່ນອນ ແລະ ບໍ່ສາມາດເຂົ້າກັນກັບພຣະເຈົ້າໄດ້. "ການຕິດຕາມພາລະກິດຂອງພຣະວິນຍານບໍລິສຸດ" ໝາຍເຖິງການເຂົ້າໃຈຄວາມປະສົງຂອງພຣະເຈົ້າໃນປັດຈຸບັນ, ການທີ່ສາມາດປະຕິບັດຕາມຄວາມຕ້ອງການໃນປັດຈຸບັນຂອງພຣະເຈົ້າ, ມີຄວາມສາມາດໃນການເຊື່ອຟັງ ແລະ ຕິດຕາມພຣະເຈົ້າໃນປັດຈຸບັນ ແລະ ເຂົ້າຕາມຖ້ອຍຄຳໃໝ່ທີ່ສຸດຂອງພຣະເຈົ້າ. ມີພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ ຄົນນັ້ນຈຶ່ງຕິດຕາມພາລະກິດຂອງພຣະວິນຍານບໍລິສຸດ ແລະ ຢູ່ໃນກະແສຂອງພຣະວິນຍານບໍລິສຸດ. ຄົນດັ່ງກ່າວບໍ່ພຽງແຕ່ສາມາດຮັບເອົາການຍົກຍ້ອງຂອງພຣະເຈົ້າ ແລະ ການພົບເຫັນພຣະເຈົ້າ, ແຕ່ຍັງສາມາດຮູ້ຈັກອຸປະນິໄສຂອງພຣະເຈົ້າຈາກພາລະກິດຫຼ້າສຸດຂອງພຣະອົງ ແລະ ສາມາດຮູ້ຈັກແນວຄິດ ແລະ ຄວາມບໍ່ເຊື່ອຟັງຂອງມະນຸດ ແລະ ທຳມະຊາດ ແລະ ແກ່ນແທ້ຂອງມະນຸດຈາກພາລະກິດຫຼ້າສຸດຂອງພຣະອົງ; ຍິ່ງໄປກວ່ານັ້ນ ພວກເຂົາສາມາດບັນລຸການປ່ຽນແປງເທື່ອລະໜ້ອຍໃນອຸປະນິໄສຂອງພວກເຂົາໃນລະຫວ່າງການຮັບໃຊ້ຂອງພວກເຂົາ. ມີພຽງແຕ່ຄົນແບບນີ້ເທົ່ານັ້ນຈຶ່ງເປັນຄົນທີ່ສາມາດຮັບພຣະເຈົ້າ ແລະ ຄົນທີ່ຄົ້ນພົບຫົນທາງທີ່ແທ້ຈິງຢ່າງຖືກຕ້ອງ. ຄົນທີ່ຖືກກຳຈັດໂດຍພາລະກິດຂອງພຣະວິນຍານແມ່ນຄົນທີ່ບໍ່ສາມາດຕິດຕາມພາລະກິດຫຼ້າສຸດຂອງພຣະເຈົ້າໄດ້ ແລະ ຄົນທີ່ກະບົດຕໍ່ພາລະກິດຫຼ້າສຸດຂອງພຣະເຈົ້າ. ເຫດຜົນທີ່ຄົນດັ່ງກ່າວຕໍ່ຕ້ານພຣະເຈົ້າຢ່າງເປີດເຜີຍກໍ່ຍ້ອນພຣະເຈົ້າໄດ້ສຳເລັດພາລະກິດໃໝ່ ແລະ ຍ້ອນພາບລັກຂອງພຣະເຈົ້າບໍ່ຄືກັນກັບສິ່ງທີ່ຢູ່ໃນແນວຄວາມຄິດຂອງພວກເຂົາ ເຊິ່ງຜົນຕາມມາຂອງສິ່ງນີ້ກໍ່ຄື ພວກເຂົາຕໍ່ຕ້ານພຣະເຈົ້າຢ່າງເປີດເຜີຍ ແລະ ຕັດສິນພຣະອົງ ເຊິ່ງສົ່ງຜົນໃຫ້ພຣະເຈົ້າກຽດຊັງ ແລະ ປະຕິເສດພວກເຂົາ. ການມີຄວາມຮູ້ກ່ຽວກັບພາລະກິດຫຼ້າສຸດຂອງພຣະເຈົ້າບໍ່ແມ່ນເລື່ອງງ່າຍ, ແຕ່ຖ້າຄົນມີຈິດໃຈທີ່ຈະເຊື່ອຟັງພາລະກິດຂອງພຣະເຈົ້າ ແລະ ສະແຫວງຫາພາລະກິດຂອງພຣະເຈົ້າ, ແລ້ວພວກເຂົາກໍ່ຈະມີໂອກາດທີ່ຈະເຫັນພຣະເຈົ້າ ແລະ ຈະມີໂອກາດໄດ້ຮັບການນຳພາໃໝ່ສຸດຈາກພຣະວິນຍານບໍລິສຸດ. ຄົນທີ່ຕໍ່ຕ້ານພາລະກິດຂອງພຣະເຈົ້າໂດຍເຈດຕະນາບໍ່ສາມາດຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດ ຫຼື ການນຳພາຈາກພຣະເຈົ້າໄດ້. ດ້ວຍເຫດນີ້ ບໍ່ວ່າຄົນຈະສາມາດຮັບພາລະກິດຫຼ້າສຸດຂອງພຣະເຈົ້າ ຫຼື ບໍ່ ແມ່ນຂຶ້ນຢູ່ກັບພຣະຄຸນຂອງພຣະເຈົ້າ, ມັນຂຶ້ນຢູ່ກັບການສະແຫວງຫາຂອງພວກເຂົາ ແລະ ມັນຂຶ້ນຢູ່ກັບເຈດຕະນາຂອງພວກເຂົາ.

ທຸກຄົນທີ່ສາມາດເຊື່ອຟັງຖ້ອຍຄຳໃນປັດຈຸບັນຂອງພຣະວິນຍານບໍລິສຸດກໍ່ໄດ້ຮັບການອວຍພອນ. ມັນບໍ່ກ່ຽວກັບວ່າພວກເຂົາເຄີຍເປັນແນວໃດ ຫຼື ພຣະວິນຍານບໍລິສຸດເຄີຍເຮັດພາລະກິດພາຍໃນຕົວພວກເຂົາແນວໃດ, ຄົນທີ່ໄດ້ຮັບພາລະກິດຫຼ້າສຸດແມ່ນໄດ້ຮັບພອນຫຼາຍທີ່ສຸດ ແລະ ຄົນທີ່ບໍ່ສາມາດຕິດຕາມພາລະກິດຫຼ້າສຸດໃນປັດຈຸບັນແມ່ນຖືກກຳຈັດ. ພຣະເຈົ້າຕ້ອງການຄົນທີ່ສາມາດຍອມຮັບແສງສະຫວ່າງໃໝ່ ແລະ ພຣະອົງຕ້ອງການຄົນທີ່ຍອມຮັບ ແລະ ຮູ້ຈັກພາລະກິດຫຼ້າສຸດຂອງພຣະອົງ. ເປັນຫຍັງຈຶ່ງມີການເວົ້າວ່າເຈົ້າຕ້ອງເປັນຍິງສາວບໍລິສຸດທີ່ຮັກສາພົມມະຈັນ? ຍິງສາວບໍລິສຸດທີ່ຮັກສາພົມ

ມະຈັນສາມາດສະແຫວງຫາພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຂົ້າໃຈສິ່ງໃໝ່ໆ ແລະ ຍິ່ງໄປກວ່ານັ້ນແມ່ນສາມາດປະວາງແນວຄິດເກົ່າໆອອກໄປ ແລະ ເຊື່ອຟັງພາລະກິດຂອງພຣະເຈົ້າໃນປັດຈຸບັນ. ຄົນກຸ່ມນີ້ທີ່ຍອມຮັບພາລະກິດໃໝ່ສຸດໃນປັດຈຸບັນແມ່ນຖືກກຳນົດລ່ວງໜ້າໂດຍພຣະເຈົ້າກ່ອນຍຸກຕ່າງໆ ແລະ ເປັນຄົນທີ່ຈະໄດ້ຮັບພອນຫຼາຍທີ່ສຸດ. ເຈົ້າໄດ້ຍິນສຽງຂອງພຣະເຈົ້າໂດຍກົງ ແລະ ເບິ່ງເຫັນການປາກົດຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ, ທົ່ວທັງສະຫວັນ ແລະ ແຜ່ນດິນໂລກ ແລະ ທົ່ວຍຸກຕ່າງໆ, ບໍ່ມີໃຜໄດ້ຮັບພອນຫຼາຍກວ່າເຈົ້າທີ່ເປັນຄົນກຸ່ມນີ້. ທັງໝົດນີ້ແມ່ນຍ້ອນພາລະກິດຂອງພຣະເຈົ້າ, ຍ້ອນການກຳນົດລ່ວງໜ້າ ແລະ ການຄັດເລືອກຂອງພຣະເຈົ້າ ແລະ ຍ້ອນພຣະຄຸນຂອງພຣະເຈົ້າ; ຖ້າພຣະເຈົ້າບໍ່ເວົ້າ ແລະ ກ່າວພຣະທຳຂອງພຣະອົງ, ສະພາບການຂອງພວກຈະເປັນຄືດັ່ງທີ່ເປັນຢູ່ໃນປັດຈຸບັນນີ້ບໍ? ດ້ວຍເຫດນັ້ນ ຂໍໃຫ້ສະຫງ່າລາສີ ແລະ ຄຳສັນລະເສີນທັງໝົດເປັນຂອງພຣະເຈົ້າ, ເພາະທຸກສິ່ງທຸກຢ່າງເກີດຂຶ້ນຍ້ອນພຣະເຈົ້າຍົກເຈົ້າຂຶ້ນ. ເມື່ອຄິດຫາສິ່ງເຫຼົ່ານີ້ແລ້ວ, ເຈົ້າຍັງຈະຂີ້ຄ້ານຢູ່ອີກບໍ? ກຳລັງຂອງເຈົ້າຍັງຈະບໍ່ສາມາດເພີ່ມຂຶ້ນບໍ?

ການທີ່ເຈົ້າສາມາດຍອມຮັບການພິພາກສາ, ການຕີສອນ, ການຂ້ຽນຕີ ແລະ ການຫຼໍ່ຫຼອມຈາກພຣະທຳຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນກໍ່ຄືການທີ່ເຈົ້າສາມາດຮັບການຝາກຝັງຂອງພຣະເຈົ້າແມ່ນຖືກກຳນົດໄວ້ລ່ວງໜ້າໂດຍພຣະເຈົ້າກ່ອນທີ່ຍຸກຕ່າງໆຈະເລີ່ມຂຶ້ນ ແລະ ດ້ວຍເຫດນັ້ນ ເຈົ້າບໍ່ຕ້ອງກັງວົນເກີນໄປເມື່ອເຈົ້າຖືກຕີສອນ. ບໍ່ມີໃຜສາມາດນຳພາລະກິດທີ່ຖືກເຮັດໃຫ້ສຳເລັດໃນຕົວເຈົ້າ ແລະ ພອນທີ່ໄດ້ມອບໃຫ້ກັບເຈົ້າໄປໃສໄດ້ ແລະ ບໍ່ມີໃຜສາມາດນຳທຸກສິ່ງທີ່ໄດ້ມອບໃຫ້ກັບເຈົ້ານັ້ນໄປໃສໄດ້. ຄົນທີ່ເຄັ່ງສາສະໜາບໍ່ມີທາງທຽບກັບເຈົ້າໄດ້. ເຈົ້າບໍ່ມີຄວາມຊ່ຽວຊານຫຼາຍໃນພຣະຄຳພີ ແລະ ບໍ່ປະກອບມີຄວາມຮູ້ກ່ຽວກັບທິດສະດີທາງສາສະໜາ, ແຕ່ຍ້ອນພຣະເຈົ້າໄດ້ປະຕິບັດພາລະກິດໃນຕົວເຈົ້າ, ເຈົ້າຈຶ່ງໄດ້ຮັບຫຼາຍກວ່າຄົນອື່ນໆໃນຍຸກທັງໝົດ ແລະ ດັ່ງນັ້ນ, ນີ້ຄືພອນທີ່ຍິ່ງໃຫຍ່ທີ່ສຸດຂອງເຈົ້າ. ຍ້ອນສິ່ງນີ້, ເຈົ້າຈຶ່ງຕ້ອງອຸທິດຕົນໃຫ້ກັບພຣະເຈົ້າຫຼາຍຂຶ້ນກວ່າເກົ່າ ແລະ ເຖິງກັບຈົງຮັກພັກດີກັບພຣະເຈົ້າຫຼາຍຂຶ້ນ. ຍ້ອນພຣະເຈົ້າຍົກເຈົ້າຂຶ້ນ, ເຈົ້າຈຶ່ງຕ້ອງເພີ່ມຄວາມພະຍາຍາມຂອງເຈົ້າ ແລະ ຕ້ອງກຽມພ້ອມວຸດທິພາວະຂອງເຈົ້າເພື່ອຍອມຮັບການຝາກຝັງຈາກພຣະເຈົ້າ. ເຈົ້າຕ້ອງຍຶດໝັ້ນໃນບ່ອນທີ່ພຣະເຈົ້າໄດ້ມອບໃຫ້ກັບເຈົ້າ, ສະແຫວງຫາເພື່ອກາຍເປັນໜຶ່ງໃນປະຊາຊົນຂອງພຣະເຈົ້າ, ຍອມຮັບການຝຶກຝົນແຫ່ງອານາຈັກ, ຖືກພຣະເຈົ້າຮັບເອົາ ແລະ ກາຍມາເປັນພະຍານທີ່ມີສະຫງ່າລາສີໃຫ້ກັບພຣະເຈົ້າໃນທີ່ສຸດ. ເຈົ້າມີຄວາມຕັ້ງໃຈເຫຼົ່ານີ້ບໍ? ຖ້າເຈົ້າມີຄວາມຕັ້ງໃຈເຫຼົ່ານັ້ນ ແລ້ວເຈົ້າກໍ່ຈະຖືກຮັບເອົາໂດຍພຣະເຈົ້າໃນທີ່ສຸດຢ່າງແນ່ນອນ ແລະ ຈະກາຍມາເປັນພະຍານທີ່ມີສະຫງ່າລາສີໃຫ້ກັບພຣະເຈົ້າ. ເຈົ້າຄວນເຂົ້າໃຈວ່າການຝາກຝັງຫຼັກກໍ່ຄືການຖືກຮັບເອົາໂດຍພຣະເຈົ້າ ແລະ ການເປັນພະຍານທີ່ມີສະຫງ່າລາສີຕໍ່ພຣະເຈົ້າ. ນີ້ຄືຄວາມປະສົງຂອງພຣະເຈົ້າ.

ພຣະທຳຂອງພຣະວິນຍານບໍລິສຸດໃນປັດຈຸບັນແມ່ນພະລັງໃນພາລະກິດຂອງພຣະວິນຍານບໍລິສຸດ ແລະ ແສງສະຫວ່າງທີ່ຕໍ່ເນື່ອງຂອງພຣະວິນຍານບໍລິສຸດຕໍ່ມະນຸດໃນລະຫວ່າງຊ່ວງເວລານີ້ແມ່ນແນວໂນ້ມພາລະກິດຂອງພຣະວິນຍານບໍລິສຸດ. ແລ້ວແມ່ນຫຍັງຄືແນວໂນ້ມພາລະກິດຂອງພຣະວິນຍານ

ບໍລິສຸດໃນປັດຈຸບັນ? ມັນຄືການນໍາພາປະຊາຊົນເຂົ້າສູ່ພາລະກິດຂອງພຣະເຈົ້າໃນປັດຈຸບັນ ແລະ ເຂົ້າສູ່ຊີວິດຝ່າຍວິນຍານທີ່ທໍາມະດາ. ມີຫຼາຍຂັ້ນຕອນເພື່ອເຂົ້າສູ່ຊີວິດຝ່າຍວິນຍານທີ່ທໍາມະດາ:

1. ຢ່າງທໍາອິດ ເຈົ້າຕ້ອງເທຫົວໃຈຂອງເຈົ້າໃສ່ພຣະທໍາຂອງພຣະເຈົ້າ. ເຈົ້າຕ້ອງບໍ່ສະແຫວງຫາພຣະທໍາຂອງພຣະເຈົ້າໃນອະດີດ ແລະ ຕ້ອງບໍ່ສຶກສາພຣະທໍາເຫຼົ່ານັ້ນ ຫຼື ປຽບທຽບພວກມັນກັບພຣະທໍາໃນປັດຈຸບັນ. ກົງກັນຂ້າມ ເຈົ້າຕ້ອງເທຫົວໃຈຂອງເຈົ້າໃສ່ພຣະທໍາຂອງພຣະເຈົ້າໃນປັດຈຸບັນຢ່າງສິ້ນເຊີງ. ຖ້າມີຄົນທີ່ຍັງປາດຖະໜາຈະອ່ານພຣະທໍາຂອງພຣະເຈົ້າ, ໜັງສືຝ່າຍວິນຍານ ຫຼື ບົດເທດສະໜາອື່ນໆຈາກອະດີດ ແລະ ເປັນຄົນທີ່ບໍ່ຕິດຕາມພຣະທໍາຂອງພຣະວິນຍານບໍລິສຸດໃນປັດຈຸບັນ, ແລ້ວພວກເຂົາກໍ່ເປັນຄົນໂງ່ຈ້າທີ່ສຸດ; ພຣະເຈົ້າກຽດຊັງຄົນແບບນີ້. ຖ້າເຈົ້າເຕັມໃຈທີ່ຈະຍອມຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດໃນປັດຈຸບັນ ແລ້ວໃຫ້ເທຫົວໃຈຂອງເຈົ້າໃສ່ຖ້ອຍຄໍາຂອງພຣະເຈົ້າໃນປັດຈຸບັນຢ່າງສິ້ນເຊີງ. ນີ້ຄືສິ່ງທໍາອິດທີ່ເຈົ້າຕ້ອງເຮັດໃຫ້ສໍາເລັດ.
2. ເຈົ້າຕ້ອງອະທິຖານບົນພື້ນຖານຂອງພຣະທໍາທີ່ພຣະເຈົ້າກ່າວໃນປັດຈຸບັນ, ເຂົ້າສູ່ພຣະທໍາຂອງພຣະເຈົ້າ ແລະ ສົນທະນາກັບພຣະເຈົ້າ ແລະ ຕັ້ງໃຈຕໍ່ໜ້າພຣະເຈົ້າ, ສ້າງມາດຕະຖານທີ່ເຈົ້າປາດຖະໜາຈະສະແຫວງໃຫ້ສໍາເລັດ.
3. ເຈົ້າຕ້ອງສະແຫວງຫາທາງເຂົ້າສູ່ຄວາມຈິງບົນພື້ນຖານຂອງພາລະກິດຂອງພຣະວິນຍານບໍລິສຸດໃນປັດຈຸບັນຢ່າງເລິກເຊິ່ງ. ຢ່າຍຶດຕິດກັບຖ້ອຍທີ່ຫຼ້າສະໄໝ ແລະ ທິດສະດີຈາກອະດີດ.
4. ເຈົ້າຕ້ອງສະແຫວງຫາເພື່ອຮັບເອົາການສໍາຜັດຈາກພຣະວິນຍານບໍລິສຸດ ແລະ ເຂົ້າສູ່ພຣະທໍາຂອງພຣະເຈົ້າ.
5. ເຈົ້າຕ້ອງສະແຫວງຫາທາງເຂົ້າສູ່ເສັ້ນທາງທີ່ພຣະວິນຍານບໍລິສຸດກ້າວເດີນໃນປັດຈຸບັນ.

ແລ້ວເຈົ້າຈະສະແຫວງຫາການສໍາຜັດຈາກພຣະວິນຍານບໍລິສຸດໄດ້ແນວໃດ? ສິ່ງທີ່ສໍາຄັນກໍ່ຄືການມີຊີວິດຢູ່ໃນພຣະທໍາຂອງພຣະເຈົ້າໃນປັດຈຸບັນ ແລະ ອະທິຖານບົນພື້ນຖານຄວາມຕ້ອງການຂອງພຣະເຈົ້າ. ເມື່ອໄດ້ອະທິຖານໃນລັກສະນະນີ້, ພຣະວິນຍານບໍລິສຸດກໍ່ຈະສໍາຜັດເຈົ້າຢ່າງແນ່ນອນ. ຖ້າເຈົ້າບໍ່ສະແຫວງຫາບົນພື້ນຖານພຣະທໍາທີ່ພຣະເຈົ້າກ່າວໃນປັດຈຸບັນ, ແລ້ວມັນກໍ່ຈະບໍ່ເກີດໝາກຜົນຫຍັງເລີຍ. ເຈົ້າຄວນອະທິຖານ ແລະ ເວົ້າວ່າ: "ໂອ ພຣະເຈົ້າ! ຂ້ານ້ອຍຕໍ່ຕ້ານພຣະອົງ ແລະ ຂ້ານ້ອຍເປັນໜີ້ບຸນຄຸນພຣະອົງຢ່າງຫຼວງຫຼາຍ; ຂ້ານ້ອຍບໍ່ເຊື່ອຟັງຫຼາຍ ແລະ ບໍ່ເຄີຍເຮັດໃຫ້ພຣະອົງພໍໃຈ. ໂອ ພຣະເຈົ້າ, ຂ້ານ້ອຍປາດຖະໜາໃຫ້ພຣະອົງຊ່ວຍຂ້ານ້ອຍໃຫ້ລອດພົ້ນ, ຂ້ານ້ອຍປາດຖະໜາຮັບໃຊ້ພຣະອົງຈົນເຖິງທີ່ສຸດ, ຂ້ານ້ອຍປາດຖະໜາທີ່ຈະຕາຍເພື່ອພຣະອົງ. ພຣະອົງຕັດສິນຂ້ານ້ອຍ ແລະ ຕີສອນຂ້ານ້ອຍ ແລະ ຂ້ານ້ອຍບໍ່ມີຄໍາຕໍ່ວ່າໃດໆ; ຂ້ານ້ອຍຕໍ່ຕ້ານພຣະອົງ ແລະ ຂ້ານ້ອຍສົມຄວນຕາຍເພື່ອວ່າທຸກຄົນອາດເຫັນອຸປະນິໄສອັນທ່ຽງທໍາຂອງພຣະອົງໃນຄວາມຕາຍຂອງຂ້ານ້ອຍ". ເມື່ອເຈົ້າອະທິຖານຈາກຫົວໃຈຂອງເຈົ້າໃນລັກສະນະນີ້, ພຣະເຈົ້າຈະໄດ້ຍິນເຈົ້າ ແລະ ຈະນໍາພາເຈົ້າ; ຖ້າເຈົ້າບໍ່ອະທິຖານບົນພື້ນຖານພຣະທໍາຂອງພຣະວິນຍານບໍລິສຸດໃນປັດຈຸບັນ, ມັນກໍ່ເປັນໄປບໍ່ໄດ້ທີ່ພຣະວິນຍານ

ບໍລິສຸດຈະສຳຜັດເຈົ້າ. ຖ້າເຈົ້າອະທິຖານຕາມຄວາມປະສົງຂອງພຣະອົງ ແລະ ຕາມສິ່ງທີ່ພຣະເຈົ້າປາດຖະໜາຢາກເຮັດໃນປັດຈຸບັນ, ເຈົ້າຈະເວົ້າວ່າ: "ໂອ ພຣະເຈົ້າ! ຂ້ານ້ອຍປາດຖະໜາທີ່ຈະຍອມຮັບການຝາກຝັງຂອງພຣະອົງ ແລະ ຊື່ສັດກັບການຝາກຝັງຂອງພຣະອົງ ແລະ ຂ້ານ້ອຍເຕັມໃຈທີ່ຈະອຸທິດຊີວິດທັງໝົດຂອງຂ້ານ້ອຍເພື່ອສະຫງ່າລາສີຂອງພຣະເຈົ້າ, ເພື່ອວ່າທຸກສິ່ງທີ່ຂ້ານ້ອຍເຮັດຈະສາມາດບັນລຸຕາມມາດຕະຖານຂອງປະຊາຊົນຂອງພຣະເຈົ້າ. ຂໍໃຫ້ຫົວໃຈຂອງຂ້ານ້ອຍໄດ້ຮັບການສຳຜັດຈາກພຣະອົງ. ຂ້ານ້ອຍປາດຖະໜາໃຫ້ພຣະວິນຍານຂອງພຣະອົງໃຫ້ສ່ອງແສງສະຫວ່າງໃຫ້ແກ່ຕົວຂ້ານ້ອຍ, ເຮັດໃຫ້ສິ່ງທີ່ຂ້ານ້ອຍເຮັດທັງໝົດນຳຄວາມອັບອາຍໄປສູ່ຊາຕານ, ເພື່ອໃນທີ່ສຸດ ຂ້ານ້ອຍຈະຖືກຮັບເອົາໂດຍພຣະອົງ". ຖ້າເຈົ້າອະທິຖານໃນລັກສະນະນີ້, ໃນລັກສະນະທີ່ເນັ້ນໃສ່ຄວາມປະສົງຂອງພຣະເຈົ້າ, ແລ້ວພຣະວິນຍານບໍລິສຸດຈະປະຕິບັດພາລະກິດໃນຕົວເຈົ້າຢ່າງແນ່ນອນ. ມັນບໍ່ກ່ຽວກັບວ່າໃນຄຳອະທິຖານຂອງເຈົ້າມີຄຳເວົ້າຫຼາຍພຽງໃດ, ສິ່ງທີ່ສຳຄັນກໍ່ຄືເຈົ້າເຂົ້າໃຈຄວາມປະສົງຂອງພຣະເຈົ້າ ຫຼື ບໍ່. ພວກເຈົ້າທຸກຄົນອາດມີປະສົບການດັ່ງຕໍ່ໄປນີ້: ບາງເທື່ອ ໃນຂະນະທີ່ອະທິຖານຢູ່ໃນບ່ອນຊຸມນຸມ, ພະລັງໃນພາລະກິດຂອງພຣະວິນຍານບໍລິສຸດແຂງກ້າເຖິງຈຸດສູງສຸດ ເຮັດໃຫ້ທຸກຄົນມີກຳລັງລຸກຂຶ້ນ. ບາງຄົນຮ້ອງໄຫ້ຢ່າງຂົມຂື່ນ ແລະ ສະອື້ນດ້ວຍນໍ້າຕາໃນຂະນະທີ່ກຳລັງອະທິຖານ, ມີຄວາມສຳນຶກຜິດຕໍ່ໜ້າພຣະເຈົ້າ ແລະ ບາງຄົນສະແດງຄວາມຕັ້ງໃຈຂອງພວກເຂົາ ແລະ ກ່າວຄຳໝັ້ນສັນຍາ. ສິ່ງດັ່ງກ່າວແມ່ນຜົນໄດ້ຮັບຈາກພາລະກິດຂອງພຣະວິນຍານບໍລິສຸດ. ໃນມື້ນີ້ ມັນຈຳເປັນທີ່ທຸກຄົນຈະເທຫົວໃຈຂອງພວກເຂົາໃສ່ພຣະທຳຂອງພຣະເຈົ້າຢ່າງສິ້ນເຊີງ. ຢ່າໃສ່ໃຈກັບພຣະທຳທີ່ຖືກກ່າວກ່ອນໜ້ານີ້; ຖ້າເຈົ້າຍັງຍຶດຕິດກັບສິ່ງທີ່ມາກ່ອນໜ້ານີ້, ແລ້ວພຣະວິນຍານບໍລິສຸດຈະບໍ່ປະຕິບັດພາລະກິດພາຍໃນຕົວເຈົ້າ. ເຈົ້າເຫັນບໍວ່າ ສິ່ງນີ້ສຳຄັນພຽງໃດ?

ເຈົ້າຮູ້ຈັກເສັ້ນທາງທີ່ພຣະວິນຍານບໍລິສຸດກ້າວເດີນໃນປັດຈຸບັນບໍ? ຫົວຂໍ້ຫຼາຍຢ່າງຂ້າງເທິງແມ່ນສິ່ງທີ່ພຣະວິນຍານບໍລິສຸດຈະເຮັດໃຫ້ສຳເລັດໃນປັດຈຸບັນ ແລະ ໃນອະນາຄົດ; ຫົວຂໍ້ເຫຼົ່ານັ້ນແມ່ນເສັ້ນທາງທີ່ພຣະວິນຍານບໍລິສຸດກ້າວເດີນ ແລະ ທາງເຂົ້າທີ່ມະນຸດຄວນສະແຫວງຫາ. ໃນການເຂົ້າສູ່ຊີວິດຂອງເຈົ້າ ຢ່າງໜ້ອຍທີ່ສຸດ ເຈົ້າຕ້ອງເທຫົວໃຈຂອງເຈົ້າໃສ່ພຣະທຳຂອງພຣະເຈົ້າ ແລະ ສາມາດຍອມຮັບການພິພາກສາ ແລະ ການຕີສອນຈາກພຣະທຳຂອງພຣະເຈົ້າ; ຫົວໃຈຂອງເຈົ້າຕ້ອງປາດຖະໜາຫາພຣະເຈົ້າ, ເຈົ້າຕ້ອງສະແຫວງຫາທາງເຂົ້າສູ່ຄວາມຈິງທີ່ເລິກເຊິ່ງ ແລະ ຈຸດປະສົງທີ່ພຣະເຈົ້າຕ້ອງການ. ເມື່ອເຈົ້າມີກຳລັງນີ້ ແລ້ວມັນກໍ່ສະແດງໃຫ້ເຫັນວ່າເຈົ້າໄດ້ຮັບການສຳຜັດໂດຍພຣະເຈົ້າ ແລະ ຫົວໃຈຂອງເຈົ້າກໍ່ເລີ່ມຫັນມາຫາພຣະເຈົ້າແລ້ວ.

ຂັ້ນຕອນທຳອິດຂອງການເຂົ້າສູ່ຊີວິດຄືການເທຫົວໃຈຂອງເຈົ້າໃສ່ພຣະທຳຂອງພຣະເຈົ້າຢ່າງສົມບູນ ແລະ ຂັ້ນຕອນທີສອງຄືການຍອມຮັບການສຳຜັດຈາກພຣະວິນຍານບໍລິສຸດ. ແມ່ນຫຍັງຄືຜົນທີ່ຈະໄດ້ຮັບຈາກການຍອມຮັບການສຳຜັດຈາກພຣະວິນຍານບໍລິສຸດ? ມັນຄືຄວາມສາມາດທີ່ຈະປາດຖະໜາ, ສະແຫວງຫາ ແລະ ຄົ້ນຫາຄວາມຈິງທີ່ເລິກເຊິ່ງຍິ່ງຂຶ້ນ ແລະ ຄວາມສາມາດທີ່ຈະຮ່ວມມືກັບພຣະເຈົ້າໃນລັກສະນະທີ່ດີ. ໃນປັດຈຸບັນ ເຈົ້າຮ່ວມມືກັບພຣະເຈົ້າ ເຊິ່ງໝາຍຄວາມວ່າມີຈຸດປະສົງ

ໃນການສະແຫວງຫາຂອງເຈົ້າ, ຄຳອະທິຖານຂອງເຈົ້າ ແລະ ການສົນທະນາຂອງເຈົ້າກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ເຈົ້າປະຕິບັດໜ້າທີ່ຂອງເຈົ້າໂດຍສອດຄ່ອງກັບຄວາມຕ້ອງການຂອງພຣະເຈົ້າ, ມີພຽງແຕ່ສິ່ງນີ້ຈຶ່ງເປັນການຮ່ວມມືກັບພຣະເຈົ້າ. ຖ້າເຈົ້າພຽງແຕ່ເວົ້າເຖິງການປ່ອຍໃຫ້ພຣະເຈົ້າເຮັດ, ແຕ່ບໍ່ໄດ້ລົງມືປະຕິບັດ ຫຼື ອະທິຖານ ຫຼື ສະແຫວງຫາ, ແລ້ວສິ່ງນີ້ຈະສາມາດເປັນການຮ່ວມມືບໍ? ຖ້າເຈົ້າບໍ່ມີການຮ່ວມມືໃດໆໃນຕົວເຈົ້າ ແລະ ປາສະຈາກການຝຶກຝົນສຳລັບທາງເຂົ້າທີ່ມີຈຸດປະສົງ, ແລ້ວເຈົ້າກໍ່ບໍ່ໄດ້ໃຫ້ຄວາມຮ່ວມມື. ບາງຄົນກ່າວວ່າ: "ທຸກສິ່ງຂຶ້ນຢູ່ກັບການກຳນົດໄວ້ລ່ວງໜ້າຂອງພຣະເຈົ້າ, ນັ້ນຄືພຣະເຈົ້າເຮັດທຸກສິ່ງດ້ວຍພຣະອົງເອງ; ຖ້າພຣະເຈົ້າບໍ່ເຮັດມັນ, ແລ້ວມະນຸດຈະເຮັດໄດ້ແນວໃດ?" ພາລະກິດຂອງພຣະເຈົ້າທຳມະດາ ແລະ ບໍ່ແມ່ນສິ່ງທີ່ເໜືອທຳມະຊາດແມ່ນແຕ່ໜ້ອຍດຽວ ແລະ ມີພຽງແຕ່ຜ່ານການສະແຫວງຫາທີ່ກະຕືລືລົ້ນຂອງເຈົ້າເທົ່ານັ້ນ, ພຣະວິນຍານບໍລິສຸດຈຶ່ງປະຕິບັດພາລະກິດ, ຍ້ອນພຣະເຈົ້າບໍ່ບັງຄັບມະນຸດ ນັ້ນກໍ່ຄື ເຈົ້າຕ້ອງມອບໂອກາດໃຫ້ພຣະເຈົ້າປະຕິບັດພາລະກິດ ແລະ ຖ້າເຈົ້າບໍ່ສະແຫວງຫາ ຫຼື ເຂົ້າ ແລະ ຖ້າບໍ່ມີຄວາມປາດຖະໜາແມ່ນແຕ່ໜ້ອຍດຽວໃນຫົວໃຈຂອງເຈົ້າ, ແລ້ວພຣະເຈົ້າກໍຈະບໍ່ມີໂອກາດທີ່ຈະປະຕິບັດພາລະກິດໄດ້. ເຈົ້າສາມາດສະແຫວງຫາການສຳຜັດຈາກພຣະເຈົ້າໂດຍເສັ້ນທາງໃດ? ຜ່ານຄຳອະທິຖານ ແລະ ການເຂົ້າໃກ້ຊິດພຣະເຈົ້າ. ແຕ່ໃຫ້ຈື່ໄວ້ວ່າ ສິ່ງທີ່ສຳຄັນກໍ່ຄືມັນຕ້ອງຢູ່ບົນພື້ນຖານພຣະທຳທີ່ພຣະເຈົ້າກ່າວໄວ້ເທົ່ານັ້ນ. ເມື່ອເຈົ້າຖືກສຳຜັດໂດຍພຣະເຈົ້າຢູ່ຕະຫຼອດ, ເຈົ້າກໍ່ບໍ່ຕົກເປັນທາດຂອງເນື້ອໜັງ: ສາມີ, ພັນລະຍາ, ລູກ ແລະ ເງິນ ນັ້ນກໍ່ຄື ສິ່ງເຫຼົ່ານີ້ຈະບໍ່ສາມາດຜູກມັດເຈົ້າໄດ້ ແລະ ເຈົ້າກໍ່ຈະພຽງແຕ່ປາດຖະໜາທີ່ຈະສະແຫວງຫາຄວາມຈິງ ແລະ ມີຊີວິດຢູ່ຕໍ່ໜ້າພຣະເຈົ້າ. ໃນເວລານີ້, ເຈົ້າຈະເປັນຄົນທີ່ມີຊີວິດຢູ່ໃນດິນແດນແຫ່ງອິດສະຫຼະພາບ.

# ຜູ້ຄົນທີ່ປ່ຽນແປງອຸປະນິໄສແມ່ນຄົນທີ່ໄດ້ເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ

ກ່ອນອື່ນໝົດ ບາດກ້າວທຳອິດຂອງເສັ້ນທາງແຫ່ງພຣະວິນຍານບໍລິສຸດກ່ຽວກັບມະນຸດແມ່ນເພື່ອເຮັດໃຫ້ຫົວໃຈຂອງມະນຸດຫ່າງອອກຈາກຜູ້ຄົນ, ເຫດການ ແລະ ສິ່ງຂອງ ແລະ ເຂົ້າສູ່ພຣະທຳຂອງພຣະເຈົ້າ, ເຮັດໃຫ້ຫົວໃຈຂອງມະນຸດເຊື່ອວ່າ ພຣະທຳຂອງພຣະເຈົ້າຢູ່ເໜືອຂໍ້ສົງໄສທຸກປະການ ແລະ ເປັນຈິງທັງໝົດ. ຖ້າເຈົ້າເຊື່ອໃນພຣະເຈົ້າ, ເຈົ້າກໍຕ້ອງເຊື່ອໃນພຣະທຳຂອງພຣະອົງ; ຫຼັງຈາກເວລາຫຼາຍປີທີ່ໄດ້ເຊື່ອໃນພຣະເຈົ້າ ຖ້າເຈົ້າຍັງບໍ່ຮູ້ເສັ້ນທາງທີ່ພຣະວິນຍານບໍລິສຸດເດີນ, ແລ້ວເຈົ້າເປັນຜູ້ເຊື່ອແທ້ບໍ? ເພື່ອບັນລຸຊີວິດຂອງມະນຸດປົກກະຕິ, ຊີວິດທຳມະດາຂອງມະນຸດທີ່ມີຄວາມສຳພັນປົກກະຕິກັບພຣະເຈົ້າ, ກ່ອນອື່ນ ເຈົ້າຕ້ອງເຊື່ອໃນພຣະທຳຂອງພຣະອົງ. ຖ້າເຈົ້າຍັງບໍ່ໄດ້ບັນລຸບາດກ້າວທຳອິດໃນພາລະກິດຂອງພຣະວິນຍານບໍລິສຸດທີ່ຢູ່ໃນຜູ້ຄົນ, ແລ້ວເຈົ້າກໍບໍ່ມີຮາກຖານ. ຖ້າແມ່ນແຕ່ຫຼັກການທີ່ເລັກນ້ອຍທີ່ສຸດຍັງຢູ່ເໜືອເຈົ້າ, ເຈົ້າຈະຍ່າງໃນເສັ້ນທາງທີ່ຢູ່ເບື້ອງໜ້າໄດ້ແນວໃດ? ການຍ່າງຕາມເສັ້ນທາງທີ່ຖືກຕ້ອງທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນ ໝາຍເຖິງການເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນພາລະກິດປັດຈຸບັນຂອງພຣະວິນຍານບໍລິສຸດ; ມັນໝາຍເຖິງການຍ່າງຕາມເສັ້ນທາງທີ່ພຣະວິນຍານບໍລິສຸດຍ່າງ. ຕອນນີ້ ເສັ້ນທາງທີ່ພຣະວິນຍານບໍລິສຸດຍ່າງແມ່ນຕາມພຣະທຳໃນປັດຈຸບັນຂອງພຣະເຈົ້າ. ດັ່ງນັ້ນ ຖ້າຜູ້ຄົນຕ້ອງຍ່າງຕາມເສັ້ນທາງຂອງພຣະວິນຍານບໍລິສຸດ, ພວກເຂົາຕ້ອງເຊື່ອຟັງ ແລະ ກິນ ແລະ ດື່ມພຣະທຳໃນປັດຈຸບັນຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ພາລະກິດທີ່ພຣະອົງປະຕິບັດແມ່ນພາລະກິດແຫ່ງພຣະທຳ; ທຸກສິ່ງເລີ່ມຕົ້ນຈາກພຣະທຳຂອງພຣະອົງ ແລະ ທຸກສິ່ງແມ່ນຖືກສ້າງຂຶ້ນບົນພຣະທຳຂອງພຣະອົງ, ບົນພຣະທຳໃນປັດຈຸບັນຂອງພຣະອົງ. ບໍ່ວ່າຈະເປັນການໝັ້ນໃຈໃນພຣະເຈົ້າທີ່ບັງເກີດເປັນມະນຸດ ຫຼື ການຮູ້ຈັກກັບພຣະເຈົ້າທີ່ບັງເກີດເປັນມະນຸດ, ແຕ່ລະຢ່າງແມ່ນຈຳເປັນຕ້ອງໃຊ້ຄວາມພະຍາຍາມຫຼາຍໃນພຣະທຳຂອງພຣະອົງ. ຖ້າບໍ່ດັ່ງນັ້ນ ຜູ້ຄົນກໍບໍ່ສາມາດສຳເລັດຫຍັງໄດ້ ແລະ ຈະບໍ່ເຫຼືອຫຍັງເລີຍ. ມີພຽງບົນຮາກຖານແຫ່ງການກິນ ແລະ ດື່ມພຣະທຳຂອງພຣະເຈົ້າເທົ່ານັ້ນ ແລະ ການມາຮູ້ຈັກພຣະອົງ ແລະ ເຮັດໃຫ້ພຣະອົງພໍໃຈ, ຜູ້ຄົນຈຶ່ງຈະເລີ່ມມີຄວາມສຳພັນປົກກະຕິກັບພຣະເຈົ້າ. ສຳລັບມະນຸດແລ້ວ, ບໍ່ມີການຮ່ວມມືກັບພຣະເຈົ້າແບບໃດທີ່ດີກວ່າການກິນ ແລະ ດື່ມພຣະທຳຂອງພຣະອົງ ແລະ ການນຳພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດ. ຜ່ານການປະຕິບັດດັ່ງກ່າວ ພວກເຂົາຈຶ່ງສາມາດຍຶດໝັ້ນໄດ້ດີທີ່ສຸດໃນຄຳພະຍານຂອງພວກເຂົາກ່ຽວກັບປະຊາຊົນຂອງພຣະເຈົ້າ. ເມື່ອຜູ້ຄົນເຂົ້າໃຈ ແລະ ສາມາດເຊື່ອຟັງເນື້ອແທ້ຂອງພາລະກິດໃນປັດຈຸບັນຂອງພຣະເຈົ້າ, ພວກເຂົາກໍຈະດຳລົງຊີວິດໃນເສັ້ນທາງທີ່ນຳພາໂດຍພຣະວິນຍານບໍລິສຸດ ແລະ ຍ່າງຕາມເສັ້ນທາງທີ່ຖືກຕ້ອງແຫ່ງການເຮັດໃຫ້ມະນຸດສົມບູນຂອງພຣະເຈົ້າ. ກ່ອນໜ້ານີ້ ຜູ້ຄົນສາມາດຮັບເອົາພາລະກິດຂອງພຣະເຈົ້າໂດຍການສະແຫວງຫາຄວາມກະລຸນາຂອງພຣະເຈົ້າເທົ່ານັ້ນ ຫຼື ໂດຍການສະແຫວງຫາສັນຕິສຸກ ແລະ ຄວາມປິຕິຍິນດີ, ແຕ່ສິ່ງຕ່າງໆແມ່ນບໍ່ຄືເກົ່າແລ້ວໃນຕອນນີ້.

ຫາກປາສະຈາກພຣະທຳຂອງພຣະເຈົ້າທີ່ບັງເກີດເປັນມະນຸດ, ຫາກປາສະຈາກຄວາມເປັນຈິງແຫ່ງພຣະທຳຂອງພຣະອົງ, ຜູ້ຄົນບໍ່ສາມາດໄດ້ຮັບຄວາມເຫັນດີຈາກພຣະເຈົ້າ ແລະ ຈະຖືກພຣະເຈົ້າກຳຈັດຖິ້ມໝົດທຸກຄົນ. ເພື່ອບັນລຸຊີວິດຝ່າຍວິນຍານທຳມະດາ, ກ່ອນອື່ນ ຜູ້ຄົນຄວນກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ນຳພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດ ແລະ ຫຼັງຈາກນັ້ນ ບົນພື້ນຖານດັ່ງກ່າວນີ້ຈຶ່ງຈະເກີດມີຄວາມສຳພັນປົກກະຕິກັບພຣະເຈົ້າ. ແລ້ວເຈົ້າຈະຮ່ວມມືແນວໃດ? ເຈົ້າຈະຍຶດໝັ້ນໃນຄຳພະຍານກ່ຽວກັບປະຊາຊົນຂອງພຣະເຈົ້າແນວໃດ? ເຈົ້າຈະສ້າງຄວາມສຳພັນປົກກະຕິກັບພຣະເຈົ້າແນວໃດ?

ວິທີທີ່ຈະຮູ້ຈັກວ່າ ເຈົ້າມີຄວາມສຳພັນປົກກະຕິກັບພຣະເຈົ້າໃນຊີວິດປະຈຳວັນຂອງເຈົ້າ ຫຼື ບໍ່ນັ້ນ:

1. ເຈົ້າເຊື່ອໃນຄຳພະຍານຂອງພຣະເຈົ້າເອງບໍ?
2. ເຈົ້າເຊື່ອດ້ວຍໃຈຂອງເຈົ້າບໍວ່າ ພຣະທຳຂອງພຣະເຈົ້າເປັນຈິງ ແລະ ສົມບູນ?
3. ເຈົ້າເປັນຄົນທີ່ນຳພຣະທຳຂອງພຣະອົງເຂົ້າສູ່ການປະຕິບັດບໍ?
4. ເຈົ້າຊື່ສັດຕໍ່ການມອບໝາຍຂອງພຣະອົງບໍ? ເຈົ້າຈະເຮັດຫຍັງເພື່ອຊື່ສັດຕໍ່ການມອບໝາຍຂອງພຣະອົງ?
5. ທຸກສິ່ງທີ່ເຈົ້າເຮັດແມ່ນເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ເປັນການຊື່ສັດຕໍ່ພຣະອົງບໍ?

ອີງຕາມແຕ່ລະຂໍ້ທີ່ກ່າວມາຂ້າງເທິງນັ້ນ, ເຈົ້າສາມາດປະເມີນໄດ້ວ່າເຈົ້າມີຄວາມສຳພັນປົກກະຕິກັບພຣະເຈົ້າໃນຂັ້ນຕອນປັດຈຸບັນ ຫຼື ບໍ່.

ຖ້າເຈົ້າສາມາດຮັບເອົາການມອບໝາຍຂອງພຣະເຈົ້າໄດ້, ຮັບເອົາສັນຍາຂອງພຣະອົງ ແລະ ຕິດຕາມເສັ້ນທາງຂອງພຣະວິນຍານບໍລິສຸດ, ແລ້ວເຈົ້າແມ່ນກຳລັງປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ເສັ້ນທາງຂອງພຣະວິນຍານບໍລິສຸດຊັດເຈນໃນຕົວເຈົ້າຢູ່ບໍ? ຕອນນີ້ ເຈົ້າປະຕິບັດຕາມເສັ້ນທາງຂອງພຣະວິນຍານບໍລິສຸດບໍ? ຫົວໃຈຂອງເຈົ້າຫຍັບເຂົ້າໃກ້ພຣະເຈົ້າບໍ? ເຈົ້າປາຖະໜາທີ່ຈະນຳໃຫ້ທັນແສງສະຫວ່າງໃໝ່ສຸດຂອງພຣະວິນຍານບໍລິສຸດບໍ? ເຈົ້າປາຖະໜາທີ່ຈະຖືກພຣະເຈົ້າຮັບເອົາຢູ່ບໍ? ເຈົ້າປາຖະໜາທີ່ຈະກາຍເປັນຄົນສະແດງເຖິງຄວາມສະຫງ່າລາສີຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກຢູ່ບໍ? ເຈົ້າມີຄວາມຕັ້ງໝັ້ນທີ່ຈະບັນລຸສິ່ງທີ່ພຣະເຈົ້າຮຽກຮ້ອງຈາກເຈົ້າບໍ່? ເມື່ອພຣະທຳຂອງພຣະເຈົ້າຖືກກ່າວອອກ ຖ້າພາຍໃນຕົວເຈົ້າມີຄວາມຕັ້ງໝັ້ນທີ່ຈະຮ່ວມມື ແລະ ຄວາມເດັດດ່ຽວທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ, ຖ້ານີ້ແມ່ນຄວາມຄິດຂອງເຈົ້າ ມັນກໍໝາຍຄວາມວ່າ ພຣະທຳຂອງພຣະເຈົ້າໄດ້ເກີດໝາກຜົນຢູ່ໃນຫົວໃຈຂອງເຈົ້າແລ້ວ. ຖ້າເຈົ້າຂາດຄວາມຕັ້ງໝັ້ນດັ່ງກ່າວ, ຖ້າເຈົ້າບໍ່ມີເປົ້າໝາຍໃນການສະແຫວງຫາ, ມັນກໍໝາຍຄວາມວ່າ ຫົວໃຈຂອງເຈົ້າບໍ່ໄດ້ຖືກສຳຜັດໂດຍພຣະເຈົ້າ.

ຫຼັງຈາກທີ່ຜູ້ຄົນໄດ້ເຂົ້າສູ່ການຝຶກຝົນໃນອານາຈັກຢ່າງເປັນທາງການ, ສິ່ງທີ່ພຣະເຈົ້າຮຽກຮ້ອງໃນຕົວພວກເຂົາກໍຍິ່ງເພີ່ມຂຶ້ນສູງກວ່າເກົ່າ. ຄວາມຮຽກຮ້ອງທີ່ສູງຂຶ້ນກວ່າເກົ່າເຫຼົ່ານີ້ສາມາດເບິ່ງອອກຢູ່ໃນປະເດັນໃດແດ່? ກ່ອນໜ້ານີ້, ຜູ້ຄົນແມ່ນບໍ່ມີຊີວິດ. ໃນປັດຈຸບັນ ພວກເຂົາແມ່ນສະແຫວງຫາຊີວິດ, ພວກເຂົາສະແຫວງຫາເພື່ອກາຍເປັນຄົນຂອງພຣະເຈົ້າ, ເພື່ອຖືກຮັບເອົາໂດຍພຣະເຈົ້າ, ເພື່ອຖືກ

ພຣະເຈົ້າເຮັດໃຫ້ສົມບູນ. ນີ້ບໍ່ແມ່ນລະດັບທີ່ສູງຂຶ້ນບໍ? ຕາມຄວາມຈິງແລ້ວ ສິ່ງທີ່ພຣະເຈົ້າຮຽກຮ້ອງຈາກຜູ້ຄົນແມ່ນງ່າຍກວ່າເກົ່າ. ຜູ້ຄົນບໍ່ຈຳເປັນຕ້ອງເປັນຜູ້ບໍລິການ ຫຼື ຕ້ອງຕາຍ, ສິ່ງທີ່ຮຽກຮ້ອງຈາກພວກເຂົາກໍຄືການກາຍເປັນຄົນຂອງພຣະເຈົ້າເທົ່ານັ້ນ. ນັ້ນບໍ່ແມ່ນສິ່ງທີ່ງ່າຍກວ່າເດີມບໍ? ສິ່ງທີ່ເຈົ້າຕ້ອງເຮັດກໍຄືຖວາຍຫົວໃຈຂອງເຈົ້າໃຫ້ກັບພຣະເຈົ້າເທົ່ານັ້ນ ແລະ ຍອມຢູ່ພາຍໃຕ້ການນຳພາຂອງພຣະອົງ ແລະ ທຸກສິ່ງກໍຈະເກີດຜົນ. ເປັນຫຍັງເຈົ້າຈຶ່ງຮູ້ສຶກວ່າ ສິ່ງນີ້ຫຍຸ້ງຍາກຫຼາຍປານນັ້ນ? ການເຂົ້າສູ່ຊີວິດທີ່ກ່າວເຖິງໃນປັດຈຸບັນແມ່ນຊັດເຈນກວ່າແຕ່ກ່ອນ; ໃນອະດີດ ຜູ້ຄົນສັບສົນ ແລະ ບໍ່ຮູ້ວ່າຄວາມເປັນຈິງແຫ່ງຄວາມຈິງແມ່ນຫຍັງ. ໃນຄວາມເປັນຈິງ ທຸກຄົນທີ່ມີປະຕິກິລິຍາເມື່ອພວກເຂົາໄດ້ຍິນພຣະທຳຂອງພຣະເຈົ້າ, ຄົນທີ່ໄດ້ຮັບຄວາມສະຫວ່າງ ແລະ ແສງເຍື່ອງທາງຈາກພຣະວິນຍານບໍລິສຸດ ແລະ ຄົນທີ່ຕໍ່ໜ້າພຣະເຈົ້າໄດ້ຮັບເອົາການເຮັດໃຫ້ສົມບູນຂອງພຣະອົງ ແລະ ໄດ້ປ່ຽນແປງອຸປະນິໄສ, ທຸກຄົນແບບນີ້ລ້ວນແລ້ວແຕ່ມີຊີວິດ. ພຣະເຈົ້າຕ້ອງການສິ່ງມີຊີວິດ ບໍ່ແມ່ນສິ່ງທີ່ຕາຍ; ຖ້າເຈົ້າຕາຍແລ້ວ, ເຈົ້າກໍບໍ່ມີຊີວິດ ແລະ ພຣະເຈົ້າຈະບໍ່ເວົ້າກັບເຈົ້າ ແລ້ວແຮງໄກທີ່ພຣະອົງຈະຍົກເຈົ້າໃຫ້ຂຶ້ນເປັນໜຶ່ງໃນຄົນຂອງພຣະອົງ. ຍ້ອນພວກເຈົ້າຖືກພຣະເຈົ້າຍົກຂຶ້ນ ແລະ ໄດ້ຮັບພອນຍິ່ງໃຫຍ່ຈາກພຣະອົງ, ສິ່ງນີ້ແມ່ນສະແດງໃຫ້ເຫັນວ່າ ພວກເຈົ້າລ້ວນແລ້ວແຕ່ເປັນຄົນທີ່ມີຊີວິດ ແລະ ຄົນທີ່ມີຊີວິດແມ່ນມາຈາກພຣະເຈົ້າ.

ໃນການສະແຫວງຫາການປ່ຽນແປງໃນຊີວິດ-ອຸປະນິໄສຂອງຄົນໆໜຶ່ງ, ເສັ້ນທາງແຫ່ງການປະຕິບັດແມ່ນງ່າຍ. ຖ້າຫາກໃນປະສົບການຕົວຈິງຂອງເຈົ້າ ເຈົ້າສາມາດປະຕິບັດຕາມພຣະທຳໃນປັດຈຸບັນຂອງພຣະວິນຍານບໍລິສຸດ ແລະ ປະສົບການໃນພາລະກິດຂອງພຣະເຈົ້າ, ແລ້ວອຸປະນິໄສຂອງເຈົ້າກໍສາມາດປ່ຽນແປງໄດ້. ຖ້າເຈົ້າປະຕິບັດຕາມທຸກສິ່ງທີ່ພຣະວິນຍານບໍລິສຸດກ່າວ ແລະ ສະແຫວງຫາໃນທຸກສິ່ງທີ່ພຣະວິນຍານບໍລິສຸດກ່າວ, ແລ້ວເຈົ້າກໍເປັນຄົນທີ່ເຊື່ອຟັງພຣະອົງ ແລະ ຈະມີການປ່ຽນແປງໃນອຸປະນິໄສຂອງເຈົ້າ. ອຸປະນິໄສຂອງຜູ້ຄົນປ່ຽນແປງພ້ອມກັບພຣະທຳໃນປັດຈຸບັນຂອງພຣະວິນຍານບໍລິສຸດ; ຖ້າເຈົ້າຍຶດຕິດກັບປະສົບການເດີມຂອງເຈົ້າ ແລະ ຍຶດຕິດຢູ່ກັບກົດເກນໃນອະດີດຢູ່ສະເໝີ, ແລ້ວອຸປະນິໄສຂອງເຈົ້າກໍບໍ່ສາມາດປ່ຽນແປງໄດ້. ຖ້າພຣະທຳຂອງພຣະວິນຍານບໍລິສຸດໃນປັດຈຸບັນຮຽກຮ້ອງໃຫ້ທຸກຄົນເຂົ້າສູ່ຊີວິດຂອງຄວາມເປັນມະນຸດທຳມະດາ ແຕ່ເຈົ້າຍັງຕັ້ງໝັ້ນກັບສິ່ງຕ່າງໆທີ່ຢູ່ພາຍນອກ ແລະ ສັບສົນກ່ຽວກັບຄວາມເປັນຈິງ ແລະ ບໍ່ຈິງຈັງກັບສິ່ງນັ້ນ, ແລ້ວເຈົ້າກໍເປັນຄົນທີ່ບໍ່ສາມາດນຳທັນພາລະກິດຂອງພຣະວິນຍານບໍລິສຸດ, ເປັນຄົນທີ່ບໍ່ໄດ້ເຂົ້າສູ່ເສັ້ນທາງແຫ່ງການນຳພາຂອງພຣະວິນຍານບໍລິສຸດ. ບໍ່ວ່າອຸປະນິໄສຂອງເຈົ້າຈະປ່ຽນແປງ ຫຼື ບໍ່ ແມ່ນຂຶ້ນຢູ່ກັບວ່າເຈົ້ານຳທັນພຣະທຳໃນປັດຈຸບັນຂອງພຣະວິນຍານບໍລິສຸດ ຫຼື ບໍ່ ແລະ ຂຶ້ນຢູ່ກັບວ່າ ເຈົ້າມີຄວາມຮູ້ທີ່ແທ້ຈິງ ຫຼື ບໍ່. ສິ່ງນີ້ແມ່ນບໍ່ຄືກັນກັບສິ່ງທີ່ພວກເຈົ້າເຂົ້າໃຈກ່ອນໜ້ານັ້ນ. ການປ່ຽນແປງໃນອຸປະນິໄສຂອງເຈົ້າທີ່ເຈົ້າເຂົ້າໃຈກ່ອນໜ້ານັ້ນແມ່ນ ເຈົ້າຜູ້ທີ່ຕັດສິນຢ່າງໄວ ຜ່ານການລົງວິໄນຂອງພຣະເຈົ້າໄດ້ເຊົາເວົ້າໂດຍບໍ່ຄິດ; ແຕ່ນີ້ເປັນພຽງການປ່ຽນແປງໜຶ່ງດ້ານເທົ່ານັ້ນ. ໃນຕອນນີ້ ຈຸດສຳຄັນທີ່ສຸດຄືການຕິດຕາມການນຳພາຂອງພຣະວິນຍານບໍລິສຸດ: ປະຕິບັດຕາມທຸກສິ່ງທີ່ພຣະເຈົ້າກ່າວ ແລະ ເຊື່ອຟັງ

ທຸກສິ່ງທີ່ພຣະອົງກ່າວ. ຜູ້ຄົນບໍ່ສາມາດປ່ຽນແປງອຸປະນິໄສຂອງພວກເຂົາເອງ; ພວກເຂົາຕ້ອງໄດ້ຜ່ານການພິພາກສາ ແລະ ການຂ້ຽນຕີ ແລະ ການທົນທຸກ ແລະ ການຫຼໍ່ຫຼອມແຫ່ງພຣະທຳຂອງພຣະເຈົ້າ ຫຼື ການຈັດການ, ການລົງວິໄນ ແລະ ການລິຮານໂດຍພຣະທຳຂອງພຣະອົງ. ເມື່ອນັ້ນ ພວກເຂົາຈຶ່ງຈະສາມາດບັນລຸຄວາມເຊື່ອຟັງ ແລະ ຄວາມຊື່ສັດຕໍ່ພຣະເຈົ້າ ແລະ ບໍ່ເຮັດພໍເປັນພິທີຕໍ່ພຣະອົງອີກຕໍ່ໄປ. ມັນແມ່ນພາຍໃຕ້ການຫຼໍ່ຫຼອມແຫ່ງພຣະທຳຂອງພຣະເຈົ້າທີ່ເຮັດໃຫ້ອຸປະນິໄສຂອງຜູ້ຄົນປ່ຽນແປງ. ຜ່ານການເປີດໂປງ, ການພິພາກສາ, ການລົງວິໄນ ແລະ ການຈັດການຈາກພຣະທຳຂອງພຣະອົງເທົ່ານັ້ນ ພວກເຂົາຈຶ່ງຈະບໍ່ກ້າປະພຶດຢ່າງໃຈຮ້ອນອີກຕໍ່ໄປ ແຕ່ກົງກັນຂ້າມ ພວກເຂົາຈະເລີ່ມໝັ້ນຄົງ ແລະ ສະຫງົບໃຈ. ຈຸດສຳຄັນທີ່ສຸດກໍຄືພວກເຂົາສາມາດຍອມຢູ່ພາຍໃຕ້ພຣະທຳໃນປັດຈຸບັນຂອງພຣະເຈົ້າ ແລະ ພາຍໃຕ້ພາລະກິດຂອງພຣະອົງ, ເຖິງແມ່ນມັນຈະບໍ່ສອດຄ່ອງກັບແນວຄິດຂອງມະນຸດ, ພວກເຂົາກໍສາມາດປະຖິ້ມແນວຄິດເຫຼົ່ານີ້ ແລະ ເຕັມໃຈທີ່ຈະຍອມຮັບ. ໃນອະດີດ, ການເວົ້າເຖິງການປ່ຽນແປງໃນອຸປະນິໄສ ສ່ວນໃຫຍ່ ແມ່ນໝາຍເຖິງການສາມາດປະຖິ້ມຕົນເອງ, ເພື່ອຍອມໃຫ້ເນື້ອໜັງທົນທຸກ, ເພື່ອລົງວິໄນຮ່າງກາຍຂອງຄົນໆໜຶ່ງ ແລະ ເພື່ອກຳຈັດຄວາມສຸກດ້ານເນື້ອໜັງອອກຈາກຕົນເອງ ເຊິ່ງເປັນການປ່ຽນແປງໃນອຸປະນິໄສອີກແບບໜຶ່ງ. ໃນປັດຈຸບັນ, ທຸກຄົນຮູ້ວ່າ ການສະແດງເຖິງການປ່ຽນແປງໃນອຸປະນິໄສຢ່າງແທ້ຈິງແມ່ນການເຊື່ອຟັງພຣະທຳໃນປັດຈຸບັນຂອງພຣະເຈົ້າ ແລະ ການຮູ້ຈັກພາລະກິດໃໝ່ຂອງພຣະອົງຢ່າງແທ້ຈິງ. ດ້ວຍວິທີນີ້, ຄວາມເຂົ້າໃຈຂອງຜູ້ຄົນກ່ຽວກັບພຣະເຈົ້າໃນເມື່ອກ່ອນ ເຊິ່ງຖືກວາດແຕ້ມດ້ວຍແນວຄິດຂອງພວກເຂົາເອງ ແມ່ນສາມາດຖືກກຳຈັດອອກ ແລະ ພວກເຂົາຈະສາມາດບັນລຸຄວາມຮູ້ ແລະ ຄວາມເຊື່ອຟັງພຣະເຈົ້າຢ່າງແທ້ຈິງ, ມີແຕ່ສິ່ງນີ້ເທົ່ານັ້ນທີ່ເປັນການສະແດງເຖິງການປ່ຽນແປງອຸປະນິໄສຢ່າງແທ້ຈິງ.

ຜູ້ຄົນສະແຫວງຫາເພື່ອເຂົ້າສູ່ຊີວິດແມ່ນອີງຕາມພຣະທຳຂອງພຣະເຈົ້າ. ກ່ອນໜ້ານີ້, ໄດ້ເວົ້າວ່າທຸກສິ່ງຖືກເຮັດໃຫ້ສຳເລັດ ຍ້ອນພຣະທຳຂອງພຣະອົງ, ແຕ່ບໍ່ມີໃຜເຫັນຄວາມຈິງນີ້. ຖ້າເຈົ້າເຂົ້າສູ່ປະສົບການຂອງຂັ້ນຕອນໃນປັດຈຸບັນ, ທຸກສິ່ງກໍຈະຊັດເຈນຕໍ່ເຈົ້າ ແລະ ເຈົ້າຈະສ້າງພື້ນຖານທີ່ດີສຳລັບການທົດລອງໃນອະນາຄົດ. ບໍ່ວ່າພຣະເຈົ້າຈະເວົ້າຫຍັງກໍຕາມ, ໃຫ້ໃສ່ໃຈໃນການເຂົ້າສູ່ພຣະທຳຂອງພຣະອົງເທົ່ານັ້ນ. ເມື່ອພຣະເຈົ້າກ່າວວ່າ ພຣະອົງຈະເລີ່ມຂ້ຽນຕີຜູ້ຄົນ, ໃຫ້ຍອມຮັບການຂ້ຽນຕີຂອງພຣະອົງ. ເມື່ອພຣະເຈົ້າບອກໃຫ້ຜູ້ຄົນຕາຍ, ໃຫ້ຍອມຮັບການທົດລອງນັ້ນ. ຖ້າເຈົ້າດຳລົງຊີວິດຢູ່ພາຍໃນຖ້ອຍຄຳໃໝ່ທີ່ສຸດຂອງພຣະອົງຕະຫຼອດເວລາ, ພຣະທຳຂອງພຣະເຈົ້າຈະເຮັດໃຫ້ເຈົ້າສົມບູນໃນທີ່ສຸດ. ຍິ່ງເຈົ້າເຂົ້າສູ່ພຣະທຳຂອງພຣະເຈົ້າຫຼາຍສໍ່າໃດ, ເຈົ້າຍິ່ງຈະຖືກເຮັດໃຫ້ສົມບູນໄວສໍ່ານັ້ນ. ເປັນຫຍັງ ການສົນທະນາຄັ້ງແລ້ວຄັ້ງເລົ່າ ເຮົາຈຶ່ງຮຽກຮ້ອງໃຫ້ພວກເຈົ້າຮູ້ ແລະ ເຂົ້າສູ່ພຣະທຳຂອງພຣະເຈົ້າ? ມີແຕ່ເມື່ອເຈົ້າສະແຫວງຫາ ແລະ ພະເຊີນກັບພຣະທຳຂອງພຣະເຈົ້າ ແລະ ເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະອົງ, ພຣະວິນຍານບໍລິສຸດຈຶ່ງຈະມີໂອກາດປະຕິບັດພາລະກິດໃນຕົວເຈົ້າ. ສະນັ້ນ, ພວກເຈົ້າລ້ວນແລ້ວແຕ່ເປັນຜູ້ເຂົ້າຮ່ວມໃນທຸກວິທີການທີ່ພຣະເຈົ້າປະຕິບັດພາລະກິດ ແລະ ບໍ່ວ່າການທົນທຸກຂອງພວກເຈົ້າຈະຢູ່ໃນລະດັບໃດກໍຕາມ, ໃນທີ່ສຸດແລ້ວ ພວກເຈົ້າກໍຈະຮັບເອົາ

"ຂອງທີ່ລະລຶກ" ທຸກຄົນ. ເພື່ອບັນລຸຄວາມສົມບູນສຸດທ້າຍຂອງພວກເຈົ້າ, ພວກເຈົ້າຕ້ອງເຂົ້າສູ່ພຣະທຳທຸກຂໍ້ຂອງພຣະເຈົ້າ. ການທີ່ພຣະວິນຍານບໍລິສຸດເຮັດໃຫ້ຜູ້ຄົນສົມບູນບໍ່ແມ່ນເປັນການກະທຳຂອງພຣະອົງແຕ່ຝ່າຍດຽວ; ພຣະອົງຕ້ອງການຄວາມຮ່ວມມືຈາກຜູ້ຄົນ, ພຣະອົງຕ້ອງການໃຫ້ທຸກຄົນຮ່ວມມືກັບພຣະອົງຢ່າງຕັ້ງໃຈ. ບໍ່ວ່າພຣະເຈົ້າຈະເວົ້າຫຍັງກໍຕາມ, ໃຫ້ໃສ່ໃຈໃນການເຂົ້າສູ່ພຣະທຳຂອງພຣະອົງເທົ່ານັ້ນ, ສິ່ງນີ້ຈະເປັນປະໂຫຍດໃຫ້ກັບຊີວິດຂອງພວກເຈົ້າຫຼາຍກວ່າ. ທຸກສິ່ງແມ່ນເພື່ອປະສົບຄວາມສຳເລັດໃນການປ່ຽນແປງອຸປະນິໄສຂອງພວກເຈົ້າ. ເມື່ອເຈົ້າເຂົ້າສູ່ພຣະທຳຂອງພຣະເຈົ້າ, ພຣະອົງຈະສຳຜັດຫົວໃຈຂອງເຈົ້າ ແລະ ເຈົ້າຈະສາມາດຮູ້ຈັກທຸກສິ່ງທີ່ພຣະເຈົ້າປາຖະໜາທີ່ຈະບັນລຸໃນຂັ້ນຕອນນີ້ຂອງພາລະກິດຂອງພຣະອົງ ແລະ ເຈົ້າມີຄວາມມຸ່ງໝັ້ນທີ່ຈະບັນລຸສິ່ງນັ້ນໄດ້. ໃນລະຫວ່າງເວລາແຫ່ງການຂ້ຽນຕີ, ມີຄົນທີ່ເຊື່ອວ່າ ນີ້ແມ່ນວິທີການຂອງພາລະກິດ ແລະ ບໍ່ເຊື່ອໃນພຣະທຳຂອງພຣະເຈົ້າ. ຜົນຕາມມາກໍຄື ພວກເຂົາບໍ່ໄດ້ຜ່ານການຫຼໍ່ຫຼອມ ແລະ ອອກມາຈາກຊ່ວງເວລາແຫ່ງການຂ້ຽນຕີໂດຍບໍ່ໄດ້ຖືກຮັບ ຫຼື ເຂົ້າໃຈຫຍັງເລີຍ. ມີບາງຄົນທີ່ເຂົ້າສູ່ພຣະທຳເຫຼົ່ານີ້ຢ່າງແທ້ຈິງໂດຍບໍ່ສົງໄສແມ່ນແຕ່ໜ້ອຍດຽວ, ມີຄົນທີ່ເວົ້າວ່າພຣະທຳຂອງພຣະເຈົ້າສົມບູນຢ່າງແທ້ຈິງ ແລະ ມະນຸດຄວນຖືກຂ້ຽນຕີ. ພວກເຂົາພະຍາຍາມຢູ່ໃນນັ້ນເປັນໄລຍະເວລາໃດໜຶ່ງ, ປ່ອຍຖິ້ມອະນາຄົດຂອງພວກເຂົາ ແລະ ຊະຕາກຳຂອງພວກເຂົາ ແລະ ເມື່ອພວກເຂົາປາກົດຕົວ, ອຸປະນິໄສຂອງພວກເຂົາໄດ້ຜ່ານການປ່ຽນແປງບາງຢ່າງ ແລະ ພວກເຂົາຍິ່ງໄດ້ຮັບເອົາຄວາມເຂົ້າໃຈກ່ຽວກັບພຣະເຈົ້າຢ່າງເລິກເຊິ່ງກວ່າເດີມ. ຄົນທີ່ປາກົດອອກມາຈາກການຂ້ຽນຕີລ້ວນແລ້ວແຕ່ຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະເຈົ້າ ແລະ ເຂົ້າໃຈວ່າ ບາດກ້າວນີ້ຂອງພາລະກິດສະແດງເຖິງຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າ ທີ່ມີຕໍ່ພວກເຂົາ, ມັນເປັນການເອົາຊະນະ ແລະ ຄວາມລອດພົ້ນແຫ່ງຄວາມຮັກຂອງພຣະເຈົ້າ. ພວກເຂົາຍັງເວົ້າວ່າ ຄວາມຄິດຂອງພຣະເຈົ້າແມ່ນດີສະເໝີ ແລະ ທຸກສິ່ງທີ່ພຣະເຈົ້າກະທຳຕໍ່ມະນຸດມາແມ່ນມາຈາກຄວາມຮັກ ບໍ່ແມ່ນຄວາມກຽດຊັງ. ຄົນທີ່ບໍ່ເຊື່ອໃນພຣະທຳຂອງພຣະເຈົ້າ, ຄົນທີ່ບໍ່ສະແຫວງຫາພຣະທຳຂອງພຣະອົງ, ບໍ່ໄດ້ຜ່ານການຫຼໍ່ຫຼອມໃນລະຫວ່າງຊ່ວງເວລາແຫ່ງຫານຂ້ຽນຕີ ແລະ ຜົນຕາມມາກໍຄື ພຣະວິນຍານບໍລິສຸດບໍ່ໄດ້ຢູ່ກັບພວກເຂົາ ແລະ ພວກເຂົາບໍ່ໄດ້ຮັບຫຍັງເລີຍ. ສຳລັບຄົນທີ່ໄດ້ເຂົ້າສູ່ຊ່ວງເວລາແຫ່ງການຂ້ຽນຕີ, ເຖິງແມ່ນພວກເຂົາໄດ້ຜ່ານການຫຼໍ່ຫຼອມ, ພຣະວິນຍານບໍລິສຸດກໍຍັງປະຕິບັດພາລະກິດຢ່າງລັບໆຢູ່ພາຍໃນພວກເຂົາ ແລະ ຜົນຕາມມາກໍຄື ຊີວິດ-ອຸປະນິໄສຂອງພວກເຂົາແມ່ນຖືກປ່ຽນແປງ. ໃນລັກສະນະພາຍນອກ, ບາງຄົນເບິ່ງຄືວ່າ ດີໄປໝົດ, ເຕັມໄປດ້ວຍຄວາມເບີກບານຕະຫຼອດເວລາ, ແຕ່ພວກເຂົາບໍ່ໄດ້ເຂົ້າສູ່ສະພາວະແຫ່ງການຫຼໍ່ຫຼອມດ້ວຍພຣະທຳຂອງພຣະເຈົ້າ ແລະ ດັ່ງນັ້ນ ພວກເຂົາຈຶ່ງບໍ່ໄດ້ປ່ຽນແປງຫຍັງເລີຍ ນັ້ນກໍຍ້ອນວ່າ ພວກເຂົາບໍ່ເຊື່ອໃນພຣະທຳຂອງພຣະເຈົ້າ. ຖ້າເຈົ້າບໍ່ເຊື່ອໃນພຣະທຳຂອງພຣະເຈົ້າ, ແລ້ວພຣະວິນຍານບໍລິສຸດກໍຈະບໍ່ປະຕິບັດພາລະກິດໃນຕົວເຈົ້າ. ພຣະເຈົ້າປາກົດຕໍ່ທຸກຄົນທີ່ເຊື່ອໃນພຣະທຳຂອງພຣະອົງ ແລະ ຄົນທີ່ເຊື່ອ ແລະ ຮັບເອົາພຣະທຳຂອງພຣະອົງກໍຈະໄດ້ຮັບເອົາຄວາມຮັກຂອງພຣະອົງ!

ເພື່ອເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ, ເຈົ້າຄວນຄົ້ນຫາເສັ້ນທາງແຫ່ງການປະຕິບັດ

ແລະ ຮູ້ຈັກວິທີນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ. ມີພຽງແຕ່ແບບນີ້ເທົ່ານັ້ນຈຶ່ງຈະມີການປ່ຽນແປງໃນຊີວິດ-ອຸປະນິໄສຂອງເຈົ້າ, ມີພຽງແຕ່ຜ່ານເສັ້ນທາງນີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດຖືກພຣະເຈົ້າເຮັດໃຫ້ສົມບູນໄດ້ ແລະ ມີພຽງແຕ່ຄົນທີ່ຖືກພຣະເຈົ້າເຮັດໃຫ້ສົມບູນດ້ວຍວິທີນີ້ເທົ່ານັ້ນຈຶ່ງຈະສອດຄ່ອງກັບຄວາມປະສົງຂອງພຣະອົງ. ເພື່ອຮັບແສງສະຫວ່າງໃໝ່, ເຈົ້າຕ້ອງດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າ. ການໄດ້ຖືກສຳຜັດໂດຍພຣະວິນຍານບໍລິສຸດ ພຽງຄັ້ງດຽວຈະບໍ່ໄດ້ຜົນຫຍັງ, ເຈົ້າຕ້ອງລົງເລິກໄປກວ່ານັ້ນ. ສຳລັບຄົນທີ່ຖືກສຳຜັດແຕ່ຄັ້ງດຽວ, ຄວາມກະຕືລືລົ້ນທີ່ຢູ່ພາຍໃນຂອງພວກເຂົາໄດ້ຖືກດົນໃຈ ແລະ ພວກເຂົາປາຖະໜາທີ່ຈະສະແຫວງຫາ, ແຕ່ສິ່ງນີ້ຈະບໍ່ຍືນຍົງ; ພວກເຂົາຕ້ອງໄດ້ສຳຜັດໂດຍພຣະວິນຍານບໍລິສຸດຢ່າງຕໍ່ເນື່ອງ. ມີຫຼາຍຄັ້ງໃນອະດີດທີ່ເຮົາໄດ້ເອີ່ຍເຖິງຄວາມຫວັງຂອງເຮົາວ່າ ພຣະວິນຍານຂອງພຣະເຈົ້າອາດສຳຜັດວິນຍານຂອງຜູ້ຄົນ ເພື່ອວ່າພວກເຂົາຈະສະແຫວງຫາການປ່ຽນແປງໃນຊີວິດ-ອຸປະນິໄສຂອງພວກເຂົາ ແລະ ໃນຂະນະທີ່ສະແຫວງຫາເພື່ອຖືກສຳຜັດໂດຍພຣະເຈົ້ານັ້ນ ພວກເຂົາອາດເຂົ້າໃຈຄວາມບໍ່ພຽງພໍຂອງພວກເຂົາ ແລະ ໃນຂະນະທີ່ກຳລັງຜະເຊີນ ພຣະທຳຂອງພຣະອົງນັ້ນ ພວກເຂົາອາດປະຖິ້ມຄວາມບໍ່ບໍລິສຸດໃນພວກເຂົາເອງ (ຄວາມຄິດວ່າຕົນເອງຊອບທຳ, ຄວາມອວດດີ, ແນວຄິດ ແລະ ອື່ນໆອີກ). ຢ່າຄິດວ່າການຮັບເອົາແສງສະຫວ່າງໃໝ່ຢ່າງຫ້າວຫັນຈະໄດ້ຜົນ, ເຈົ້າຕ້ອງປະຖິ້ມທຸກສິ່ງທີ່ຢູ່ໃນດ້ານລົບ. ໃນດ້ານໜຶ່ງ, ພວກເຈົ້າຈຳເປັນຕ້ອງເຂົ້າຈາກດ້ານບວກ ແລະ ອີກດ້ານໜຶ່ງ ພວກເຈົ້າຈຳເປັນຕ້ອງກຳຈັດຕົນເອງໃຫ້ອອກຈາກຄວາມບໍ່ບໍລິສຸດທັງໝົດທີ່ມາຈາກດ້ານລົບ. ເຈົ້າຕ້ອງກວດສອບຕົນເອງຢ່າງຕໍ່ເນື່ອງເພື່ອເບິ່ງວ່າ ຄວາມບໍ່ບໍລິສຸດໃດແດ່ທີ່ຍັງຢູ່ພາຍໃນຕົວເຈົ້າ. ແນວຄິດສາສະໜາ, ເຈດຕະນາ, ຄວາມຫວັງ, ຄວາມຄິດວ່າຕົນເອງຊອບທຳ ແລະ ຄວາມອວດດີຂອງມະນຸດເປັນສິ່ງທີ່ບໍ່ສະອາດທັງໝົດ. ໃຫ້ເບິ່ງພາຍໃນຕົນເອງ ແລະ ປຽບທຽບຕົນເອງກັບພຣະທຳແຫ່ງການເປີດເຜີຍທັງໝົດຂອງພຣະເຈົ້າ, ເພື່ອເບິ່ງວ່າເຈົ້າມີແນວຄິດສາສະໜາຢ່າງໃດແດ່. ເມື່ອເຈົ້າເຂົ້າໃຈສິ່ງເຫຼົ່ານັ້ນຢ່າງແທ້ຈິງເທົ່ານັ້ນ ເຈົ້າຈຶ່ງຈະສາມາດກຳຈັດພວກມັນອອກໄດ້. ບາງຄົນເວົ້າວ່າ: "ຕອນນີ້ພຽງແຕ່ຕິດຕາມແສງສະຫວ່າງແຫ່ງພາລະກິດໃນປັດຈຸບັນຂອງພຣະວິນຍານບໍລິສຸດກໍພຽງພໍແລ້ວ. ບໍ່ຈຳເປັນຕ້ອງເປັນຫ່ວງສິ່ງອື່ນອີກ". ແຕ່ວ່າ ເມື່ອແນວຄິດທາງສາສະໜາຂອງເຈົ້າເກີດຂຶ້ນ, ເຈົ້າຈະກຳຈັດພວກມັນຖິ້ມໄດ້ແນວໃດ? ເຈົ້າຄິດວ່າການປະຕິບັດຕາມພຣະທຳຂອງພຣະເຈົ້າທຸກມື້ນີ້ເປັນສິ່ງທີ່ງ່າຍທີ່ຈະເຮັດບໍ? ຖ້າເຈົ້າເປັນຄົນໜຶ່ງຂອງສາສະໜາ, ການຂັດຂວາງແມ່ນສາມາດເກີດຂຶ້ນໄດ້ຈາກແນວຄິດທາງສາສະໜາຂອງເຈົ້າ ແລະ ທິດສະດີທາງສາສະໜາສາດຕາມຮີດຄອງປະເພນີທີ່ຢູ່ໃນຫົວໃຈຂອງເຈົ້າ, ເມື່ອສິ່ງເຫຼົ່ານີ້ເກີດຂຶ້ນ, ມັນແຊກແຊງຄວາມສາມາດໃນການຍອມຮັບເອົາສິ່ງໃໝ່ຂອງເຈົ້າ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ແມ່ນບັນຫາທີ່ແທ້ຈິງ. ຖ້າເຈົ້າພຽງແຕ່ສະແຫວງຫາພຣະທຳໃນປັດຈຸບັນຂອງພຣະວິນຍານບໍລິສຸດ, ເຈົ້າກໍບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້. ໃນເວລາດຽວກັນ, ໃນຂະນະທີ່ເຈົ້າສະແຫວງຫາແສງສະຫວ່າງໃນປັດຈຸບັນຂອງພຣະວິນຍານບໍລິສຸດນັ້ນ, ເຈົ້າຄວນເຂົ້າໃຈເຖິງແນວຄິດ ແລະ ເຈດຕະນາທີ່ເຈົ້າມີ ແລະ ຄວາມຄິດມະນຸດທີ່ວ່າຕົນເອງຊອບທຳທີ່ເຈົ້າມີ ແລະ ການປະພຶດທີ່ບໍ່ເຊື່ອຟັງຕໍ່ພຣະເຈົ້າ.

ຫຼັງຈາກທີ່ເຈົ້າໄດ້ເຂົ້າໃຈທຸກສິ່ງເຫຼົ່ານີ້, ເຈົ້າຕ້ອງປະຖິ້ມພວກມັນທັງໝົດ. ການທີ່ໃຫ້ເຈົ້າປະຖິ້ມການກະທຳ ແລະ ການປະພຶດທີ່ຜ່ານມາຂອງເຈົ້າລ້ວນແລ້ວແຕ່ແມ່ນເພື່ອເຮັດໃຫ້ເຈົ້າໄດ້ປະຕິບັດຕາມພຣະທຳທີ່ພຣະວິນຍານບໍລິສຸດໄດ້ກ່າວເຖິງໃນປັດຈຸບັນ. ການປ່ຽນແປງອຸປະນິໄສ ໃນດ້ານໜຶ່ງ ແມ່ນໄດ້ບັນລຸຜ່ານພຣະທຳຂອງພຣະເຈົ້າ ແລະ ອີກດ້ານໜຶ່ງ ແມ່ນຕ້ອງການຄວາມຮ່ວມມືຈາກສ່ວນຂອງມະນຸດ. ມີພາລະກິດຂອງພຣະເຈົ້າ ແລະ ກໍມີການປະຕິບັດຂອງມະນຸດ ແລະ ທັງສອງສິ່ງນີ້ແມ່ນບໍ່ສາມາດຕັດອອກຈາກກັນໄດ້.

ໃນເສັ້ນທາງການຮັບໃຊ້ໃນອະນາຄົດຂອງເຈົ້າ, ເຈົ້າຈະປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້ແນວໃດ? ໜຶ່ງປະເດັນທີ່ສຳຄັນຄືການສະແຫວງຫາເພື່ອເຂົ້າສູ່ຊີວິດ, ສະແຫວງຫາເພື່ອການປ່ຽນແປງໃນອຸປະນິໄສ ແລະ ສະແຫວງຫາເພື່ອເຂົ້າສູ່ຄວາມຈິງໃຫ້ເລິກເຊິ່ງຫຼາຍຍິ່ງຂຶ້ນ, ນີ້ແມ່ນເສັ້ນທາງເພື່ອບັນລຸການຖືກເຮັດໃຫ້ສົມບູນ ແລະ ຖືກຮັບເອົາໂດຍພຣະເຈົ້າ. ພວກເຈົ້າລ້ວນແລ້ວແຕ່ເປັນຜູ້ໄດ້ຮັບການມອບໝາຍຂອງພຣະເຈົ້າ, ແຕ່ເປັນການມອບໝາຍປະເພດໃດ? ສິ່ງນີ້ແມ່ນກ່ຽວພັນກັບຂັ້ນຕອນຕໍ່ໄປຂອງພາລະກິດ; ຂັ້ນຕອນຕໍ່ໄປຂອງພາລະກິດຈະເປັນພາລະກິດທີ່ຍິ່ງໃຫຍ່ກວ່າເກົ່າເຊິ່ງປະຕິບັດທົ່ວທັງຈັກກະວານທັງປວງ, ສະນັ້ນ ໃນປັດຈຸບັນ ພວກເຈົ້າຄວນສະແຫວງຫາການປ່ຽນແປງໃນຊີວິດ-ອຸປະນິໄສຂອງພວກເຈົ້າ, ໃນອະນາຄົດ ພວກເຈົ້າອາດກາຍເປັນເຄື່ອງພິສູດທີ່ເຮັດໃຫ້ພຣະເຈົ້າໄດ້ຮັບສະຫງ່າລາສີຜ່ານພາລະກິດຂອງພຣະອົງ, ເຮັດໃຫ້ພວກເຈົ້າກາຍເປັນຕົວຢ່າງສຳລັບພາລະກິດໃນອະນາຄົດ. ການສະແຫວງຫາໃນປັດຈຸບັນແມ່ນເພື່ອວາງພື້ນຖານສຳລັບພາລະກິດໃນອະນາຄົດ, ເພື່ອວ່າ ເຈົ້າຈະໄດ້ຖືກພຣະເຈົ້າໃຊ້ ແລະ ສາມາດເປັນພະຍານໃຫ້ກັບພຣະອົງ. ຖ້າເຈົ້າເຮັດໃຫ້ສິ່ງນີ້ເປັນເປົ້າໝາຍຂອງການສະແຫວງຫາຂອງເຈົ້າ, ເຈົ້າຈະສາມາດຮັບເອົາການສະຖິດຂອງພຣະວິນຍານບໍລິສຸດ. ຍິ່ງເຈົ້າວາງເປົ້າໝາຍໃນການສະແຫວງຫາຂອງເຈົ້າສູງສໍ່າໃດ, ເຈົ້າຍິ່ງສາມາດຖືກເຮັດໃຫ້ສົມບູນໄດ້ຫຼາຍສໍ່ານັ້ນ. ຍິ່ງເຈົ້າສະແຫວງຫາຄວາມຈິງຫຼາຍສໍ່າໃດ, ພຣະວິນຍານບໍລິສຸດຍິ່ງປະຕິບັດພາລະກິດຫຼາຍສໍ່ານັ້ນ. ຍິ່ງເຈົ້າໃສ່ກຳລັງຫຼາຍສໍ່າໃດເຂົ້າໃນການສະແຫວງຫາຂອງເຈົ້າ, ເຈົ້າຍິ່ງຈະໄດ້ຮັບຫຼາຍສໍ່ານັ້ນ. ພຣະວິນຍານບໍລິສຸດເຮັດໃຫ້ຜູ້ຄົນສົມບູນຕາມສະພາວະທີ່ຢູ່ພາຍໃນຂອງພວກເຂົາ. ບາງຄົນເວົ້າວ່າ ພວກເຂົາບໍ່ເຕັມໃຈທີ່ຈະຖືກພຣະເຈົ້າໃຊ້ ຫຼື ຖືກພຣະອົງເຮັດໃຫ້ສົມບູນ, ພວກເຂົາພຽງແຕ່ຕ້ອງການໃຫ້ເນື້ອໜັງຂອງພວກເຂົາຢູ່ປອດໄພ ແລະ ບໍ່ທົນທຸກຕໍ່ຄວາມໂຊກຮ້າຍຕ່າງໆ. ບາງຄົນບໍ່ເຕັມໃຈທີ່ຈະເຂົ້າສູ່ອານາຈັກ ແຕ່ເຕັມໃຈທີ່ຈະລົງສູ່ຂຸມເລິກທີ່ສຸດ. ໃນກໍລະນີນັ້ນ, ພຣະເຈົ້າກໍຈະປະທານດັ່ງທີ່ເຈົ້າປາຖະໜາເຊັ່ນກັນ. ບໍ່ວ່າເຈົ້າຈະສະແຫວງຫາສິ່ງໃດກໍຕາມ, ພຣະເຈົ້າກໍຈະເຮັດໃຫ້ມັນເກີດຂຶ້ນ. ແລ້ວແມ່ນຫຍັງຄືສິ່ງທີ່ເຈົ້າກຳລັງສະແຫວງຫາໃນປັດຈຸບັນນີ້? ມັນແມ່ນການຖືກເຮັດໃຫ້ສົມບູນບໍ? ການກະທຳ ແລະ ຄວາມປະພຶດໃນປັດຈຸບັນຂອງເຈົ້າແມ່ນເພື່ອຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ແລະ ເພື່ອຖືກຮັບເອົາໂດຍພຣະອົງບໍ? ເຈົ້າຕ້ອງວັດແທກຕົນເອງແບບນັ້ນໃນຊີວິດປະຈຳວັນຂອງເຈົ້າຢ່າງຕໍ່ເນື່ອງ. ຖ້າເຈົ້າໃສ່ໃຈທັງໝົດຂອງເຈົ້າເຂົ້າໃສ່ການສະແຫວງຫາເປົ້າໝາຍດຽວ, ພຣະເຈົ້າຈະເຮັດໃຫ້ເຈົ້າສົມບູນຢ່າງແນ່ນອນ. ສິ່ງດັ່ງກ່າວແມ່ນເສັ້ນທາງຂອງພຣະວິນຍານ

ບໍລິສຸດ. ເສັ້ນທາງທີ່ພຣະວິນຍານບໍລິສຸດນຳພາຜູ້ຄົນແມ່ນຖືກເຮັດໃຫ້ບັນລຸໂດຍວິທີການສະແຫວງຫາຂອງພວກເຂົາ. ຍິ່ງເຈົ້າກະຫາຍເພື່ອຖືກເຮັດໃຫ້ສົມບູນ ແລະ ຖືກຮັບເອົາໂດຍພຣະເຈົ້າ, ພຣະວິນຍານບໍລິສຸດຍິ່ງຈະປະຕິບັດພາລະກິດພາຍໃນຕົວເຈົ້າຫຼາຍສໍ່ານັ້ນ. ຍິ່ງເຈົ້າບໍ່ສາມາດສະແຫວງຫາໄດ້ຫຼາຍສໍ່າໃດ ແລະ ຍິ່ງເຈົ້າຄິດລົບ ແລະ ເສື່ອມຖອຍຫຼາຍສໍ່າໃດ, ເຈົ້າຍິ່ງຕັດໂອກາດບໍ່ໃຫ້ພຣະວິນຍານບໍລິສຸດປະຕິບັດພາລະກິດຫຼາຍສໍ່ານັ້ນ; ເມື່ອເວລາຜ່ານໄປ ພຣະວິນຍານບໍລິສຸດຈະປະຖິ້ມເຈົ້າ. ເຈົ້າປາຖະໜາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນບໍ? ເຈົ້າປາຖະໜາທີ່ຈະຖືກພຣະເຈົ້າຮັບເອົາບໍ? ເຈົ້າປາຖະໜາທີ່ຈະຖືກພຣະເຈົ້າໃຊ້ບໍ? ພວກເຈົ້າຄວນສະແຫວງຫາເພື່ອເຮັດທຸກສິ່ງໂດຍເຫັນແກ່ການຖືກເຮັດໃຫ້ສົມບູນ, ຖືກຮັບເອົາ ແລະ ຖືກໃຊ້ໂດຍພຣະເຈົ້າ, ເພື່ອວ່າຈັກກະວານ ແລະ ທຸກສິ່ງຈະສາມາດເຫັນເຖິງການກະທຳຂອງພຣະເຈົ້າທີ່ສະແດງອອກໃນຕົວຂອງພວກເຈົ້າ. ພວກເຈົ້າເປັນເຈົ້ານາຍຂອງບັນດາສິ່ງທັງປວງ ແລະ ໃນທ່າມກາງທຸກສິ່ງ ພວກເຈົ້າຈະເຮັດໃຫ້ພຣະເຈົ້າໄດ້ຮັບຄຳພະຍານ ແລະ ຄວາມສະຫງ່າລາສີຜ່ານພວກເຈົ້າ, ສິ່ງນີ້ພິສູດໃຫ້ເຫັນວ່າ ພວກເຈົ້າເປັນຄົນທີ່ໄດ້ຮັບພອນຫຼາຍທີ່ສຸດໃນທຸກລຸ້ນ!

# ການເຮັດໃຫ້ຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າ

ບໍ່ມີຂັ້ນຕອນໃດທີ່ສຳຄັນໃນການເຂົ້າສູ່ພຣະທຳຂອງພຣະເຈົ້າຫຼາຍກວ່າການເຮັດໃຫ້ຫົວໃຈຂອງເຈົ້າມີຄວາມສະຫງົບກັບການສະຖິດຂອງພຣະອົງ. ນັ້ນຄືບົດຮຽນທີ່ທຸກຄົນມີຄວາມຕ້ອງການຢ່າງຮີບດ່ວນຂອງການເຂົ້າສູ່ໃນປັດຈຸບັນ. ເສັ້ນທາງແຫ່ງການເຂົ້າສູ່ໃນການເຮັດໃຫ້ຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າມີດັ່ງຕໍ່ໄປນີ້:

1. ຖອນຫົວໃຈຂອງເຈົ້າຈາກບັນຫາພາຍນອກ. ຈົ່ງມີຄວາມສະຫງົບຢູ່ຕໍ່ໜ້າພຣະເຈົ້າ ແລະ ຕັ້ງຈິດຕັ້ງໃຈໃນການອະທິຖານຫາພຣະເຈົ້າ.
2. ຈົ່ງເຮັດໃຫ້ຫົວໃຈຂອງເຈົ້າມີຄວາມສະຫງົບຕໍ່ໜ້າພຣະເຈົ້າ, ກິນ, ດື່ມ ແລະ ຊື່ນຊົມພຣະທຳຂອງພຣະເຈົ້າ.
3. ຕັ້ງສະຕິ ແລະ ຕຶກຕອງຫາຄວາມຮັກຂອງພຣະເຈົ້າ ແລະ ໄຕ່ຕອງພາລະກິດຂອງພຣະເຈົ້າໃນຫົວໃຈຂອງເຈົ້າ.

ທຳອິດ ເລີ່ມຕົ້ນຈາກທິດທາງແຫ່ງການອະທິຖານ. ອະທິຖານດ້ວຍຄວາມຕັ້ງໃຈໃຫ້ເຕັມທີ່ ແລະ ໃຫ້ຢູ່ໃນເວລາທີ່ແນ່ນອນ. ບໍ່ວ່າເຈົ້າກົດດັນພຽງໃດໃນເວລາໃດໜຶ່ງ, ຫຍຸ້ງກັບວຽກພຽງໃດ ຫຼື ມີຫຍັງເກີດຂຶ້ນກັບເຈົ້າກໍຕາມ, ຈົ່ງອະທິຖານທຸກໆມື້ໃຫ້ເປັນເລື່ອງປົກກະຕິ, ກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃຫ້ເປັນເລື່ອງປົກກະຕິ. ຖ້າເມື່ອໃດທີ່ເຈົ້າຍັງກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ບໍ່ວ່າສະພາບອ້ອມຂ້າງເຈົ້າຈະເປັນແນວໃດກໍຕາມ, ເຈົ້າຈະມີຄວາມສຸກໃນຈິດວິນຍານຂອງເຈົ້າ ແລະ ເຈົ້າຈະບໍ່ຖືກລົບກວນດ້ວຍຄົນອື່ນ, ເຫດການ ຫຼື ສິ່ງອ້ອມຂ້າງເຈົ້າ. ເມື່ອເຈົ້າຕຶກຕອງພຣະເຈົ້າໃນຫົວໃຈຂອງເຈົ້າຢູ່ເປັນປົກກະຕິ, ສິ່ງທີ່ເກີດຂຶ້ນຢູ່ພາຍນອກຈະບໍ່ສາມາດລົບກວນເຈົ້າໄດ້. ນີ້ຄືຄວາມໝາຍຂອງການມີວຸດທິພາວະ. ເລີ່ມຕົ້ນດ້ວຍຄຳອະທິຖານ: ອະທິຖານຢ່າງງຽບສະຫງົບຢູ່ຕໍ່ໜ້າພຣະເຈົ້າແມ່ນເປັນຜົນດີທີ່ສຸດ. ຫຼັງຈາກນັ້ນຈົ່ງ ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ສະແຫວງຫາແສງສະຫວ່າງໃນພຣະທຳຂອງພຣະເຈົ້າໂດຍໄຕ່ຕອງເຖິງພຣະທຳເຫຼົ່ານັ້ນ, ຊອກຫາຫົນທາງເພື່ອປະຕິບັດຕົວຈິງ, ຮູ້ຈັກຄວາມປະສົງຂອງພຣະເຈົ້າໃນການກ່າວພຣະທຳຂອງພຣະອົງ ແລະ ເຂົ້າໃຈພຣະທຳດັ່ງກ່າວໂດຍບໍ່ມີການປ່ຽນແປງ. ຕາມທຳມະດາແລ້ວ ມັນຄວນເປັນເລື່ອງປົກກະຕິສຳລັບເຈົ້າທີ່ຈະສາມາດຫຍັບເຂົ້າໃກ້ພຣະເຈົ້າທີ່ຢູ່ໃນຫົວໃຈຂອງເຈົ້າ, ຕຶກຕອງຄວາມຮັກຂອງພຣະເຈົ້າ ແລະ ໄຕ່ຕອງພຣະທຳຂອງພຣະເຈົ້າ ໂດຍບໍ່ຮັບການລົບກວນຕໍ່ສິ່ງພາຍນອກ. ເມື່ອຫົວໃຈຂອງເຈົ້າໄດ້ຮັບຄວາມສະຫງົບສຸກໃນລະດັບໃດໜຶ່ງແລ້ວ, ເຈົ້າຈະສາມາດຮ່ຳເພິງຢູ່ໃນໃຈຢ່າງງຽບໆ ແລະ ຕຶກຕອງເຖິງຄວາມຮັກຂອງພຣະເຈົ້າ ແລະ ບໍ່ວ່າສະພາບອ້ອມຂ້າງຈະເປັນແນວໃດກໍຕາມ ຈົ່ງຫຍັບເຂົ້າໃກ້ພຣະເຈົ້າຢ່າງແທ້ຈິງຈົນກວ່າເຈົ້າຈະໄປເຖິງຈຸດທີ່ເຕັມໄປດ້ວຍຄຳສັນລະເສີນຫລັ່ງໄຫຼເຂົ້າໃນຫົວໃຈຂອງເຈົ້າ ເຊິ່ງສິ່ງເຫຼົ່ານັ້ນແມ່ນດີກວ່າການອະທິຖານຫຼາຍເທົ່າ. ແນ່ນອນ ຖ້າເຈົ້າປະສົບຜົນສຳເລັດດ້ວຍວິທີດັ່ງກ່າວ, ເຈົ້າກໍຈະມີວຸດທິພາວະຢ່າງສົມບູນ. ຖ້າເຈົ້າສາມາດຮັບສະພາວະທີ່ໄດ້ກ່າວມາຂ້າງເທິງນັ້ນກໍພິສູດໃຫ້

ເຫັນແລ້ວວ່າ ຫົວໃຈຂອງເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ນີ້ຄືບົດຮຽນພື້ນຖານຢ່າງທຳອິດ. ພຽງແຕ່ຫຼັງຈາກທີ່ມະນຸດສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າເທົ່ານັ້ນ ພວກເຂົາຈຶ່ງສາມາດໄດ້ຮັບການສຳພັດໂດຍພຣະວິນຍານບໍລິສຸດ ແລະ ໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະວິນຍານບໍລິສຸດ ແລະ ພຽງເມື່ອນັ້ນ ພວກເຂົາຈຶ່ງສາມາດສື່ສານກັບພຣະເຈົ້າໄດ້ຢ່າງແທ້ຈິງ, ລວມທັງການເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ການນຳພາຂອງພຣະວິນຍານບໍລິສຸດ. ຫລັງຈາກນັ້ນ ພວກເຂົາກໍຈະໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນຊີວິດຝ່າຍວິນຍານຂອງພວກເຂົາ. ເມື່ອການຝຶກຝົນຂອງພວກເຂົາເພື່ອໃຊ້ຊີວິດຢູ່ຕໍ່ໜ້າພຣະເຈົ້າໄດ້ເຂົ້າເຖິງຈຸດໃດໜຶ່ງ ແລະ ເມື່ອພວກເຂົາສາມາດປະຖິ້ມຕົວພວກເຂົາເອງ, ກຽດຊັງພວກເຂົາເອງ ແລະ ໃຊ້ຊີວິດຢູ່ກັບພຣະທຳຂອງພຣະເຈົ້າ ເມື່ອນັ້ນ ຫົວໃຈຂອງພວກເຂົາກໍຈະຢູ່ໃນຄວາມສະຫງົບຢ່າງແທ້ຈິງຕໍ່ໜ້າພຣະເຈົ້າ. ການທີ່ສາມາດກຽດຊັງຕົນເອງ, ສາບແຊ່ງຕົນເອງ ແລະ ປະຖິ້ມຕົນເອງແມ່ນຜົນສຳເລັດມາຈາກພາລະກິດຂອງພຣະເຈົ້າ ເຊິ່ງມະນຸດບໍ່ສາມາດເຮັດສຳເລັດໄດ້ດ້ວຍຕົນເອງ. ດ້ວຍເຫດນັ້ນ ການປະຕິບັດເຮັດໃຫ້ຫົວໃຈສະຫງົບຕໍ່ໜ້າພຣະເຈົ້າແມ່ນບົດຮຽນທີ່ມະນຸດຄວນເຂົ້າສູ່ໂດຍທັນທີທັນໃດ. ສຳລັບບາງຄົນ ພວກເຂົາບໍ່ພຽງແຕ່ບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້ຢ່າງປົກກະຕິເທົ່ານັ້ນ, ແຕ່ພວກເຂົາຍັງບໍ່ສາມາດເຮັດໃຫ້ຫົວໃຈຂອງພວກເຂົາສະຫງົບຕໍ່ໜ້າພຣະເຈົ້າແມ່ນແຕ່ໃນເວລາທີ່ອະທິຖານ. ການກະທຳແບບນີ້ແມ່ນຕໍ່າກວ່າລະດັບມາດຕະຖານຂອງພຣະເຈົ້າ! ຖ້າຫົວໃຈຂອງເຈົ້າບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ, ເຈົ້າສາມາດຖືກດົນໃຈໂດຍພຣະວິນຍານບໍລິສຸດໄດ້ບໍ? ຖ້າເຈົ້າເປັນຄົນທີ່ບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ, ເຈົ້າກໍອາດຈະຖືກລົບກວນເມື່ອມີບາງຄົນມາຫາ ຫຼື ເມື່ອມີຄົນອື່ນລົມກັນ ແລະ ຈິດໃຈຂອງເຈົ້າກໍອາດຈະເລື່ອນລອຍຢູ່ກັບສິ່ງທີ່ຄົນອື່ນກຳລັງເຮັດຢູ່ ເຊິ່ງໃນກໍລະນີນີ້ເຈົ້າແມ່ນບໍ່ໄດ້ໃຊ້ຊີວິດຢູ່ຕໍ່ໜ້າພຣະເຈົ້າເລີຍ. ຖ້າຫົວໃຈຂອງເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ, ເຈົ້າຈະບໍ່ຖືກລົບກວນໂດຍສິ່ງໃດໆທີ່ເກີດຂຶ້ນໃນໂລກພາຍນອກ ຫຼື ຖືກຄອບຄອງໂດຍຜູ້ຄົນ, ເຫດການ ຫຼື ສິ່ງໃດໆ. ຖ້າເຈົ້າໄດ້ເຂົ້າສູ່ສິ່ງນີ້ ແລ້ວສະພາວະດ້ານລົບເຫຼົ່ານັ້ນ ແລະ ສິ່ງທີ່ເປັນດ້ານລົບທັງໝົດເຊັ່ນ: ແນວຄິດຂອງມະນຸດ, ປັດຊະຍາສຳລັບການດຳລົງຊີວິດ, ຄວາມສຳພັນທີ່ບໍ່ປົກກະຕິລະຫວ່າງມະນຸດ, ຄວາມຄິດ, ຄວາມເຫັນ ແລະ ອື່ນໆ ຈະຫາຍໄປຕາມທຳມະຊາດ. ຍ້ອນເຈົ້າໄຕ່ຕອງເຖິງພຣະທຳຂອງພຣະເຈົ້າຢູ່ເປັນປະຈຳ ແລະ ຫົວໃຈຂອງເຈົ້າຢູ່ໃກ້ພຣະເຈົ້າສະເໝີ ແລະ ຖືກຄອບຄອງໂດຍພຣະທຳຂອງພຣະເຈົ້າໃນປັດຈຸບັນຕະຫຼອດ, ສິ່ງທີ່ເປັນລົບເຫຼົ່ານັ້ນກໍຈະອອກໄປຈາກເຈົ້າໂດຍທີ່ເຈົ້າບໍ່ຮູ້ສຶກຕົວເລີຍ. ເມື່ອມີສິ່ງໃໝ່ ແລະ ສິ່ງທີ່ເປັນບວກຢູ່ກັບເຈົ້າ, ສິ່ງເກົ່າທີ່ເປັນລົບກໍຈະຫາຍໄປ, ສະນັ້ນ ຢ່າສົນໃຈກັບສິ່ງເກົ່າທີ່ເປັນລົບເຫຼົ່ານັ້ນເລີຍ. ເຈົ້າບໍ່ຕ້ອງພະຍາຍາມຄວບຄຸມພວກມັນ. ເຈົ້າຄວນໃສ່ໃຈໃນການຢູ່ຢ່າງສະຫງົບຕໍ່ໜ້າພຣະເຈົ້າ, ກິນ, ດື່ມ ແລະ ຊື່ນຊົມພຣະທຳຂອງພຣະເຈົ້າໃຫ້ຫຼາຍເທົ່າທີ່ເຈົ້າຈະສາມາດເຮັດໄດ້; ຮ້ອງເພງສັນລະເສີນພຣະເຈົ້າໃຫ້ຫຼາຍເທົ່າທີ່ເຈົ້າສາມາດເຮັດໄດ້ ແລະ ຈົ່ງປ່ອຍໃຫ້ພຣະເຈົ້າມີໂອກາດໄດ້ປະຕິບັດພາລະກິດໃນຕົວເຈົ້າ; ເພາະວ່າ ໃນປັດຈຸບັນພຣະເຈົ້າຕ້ອງການເຮັດໃຫ້ມະນຸດສົມບູນແບບດ້ວຍພຣະອົງເອງ ແລະ ພຣະອົງຕ້ອງການໄດ້ຮັບ

ຫົວໃຈຂອງເຈົ້າ; ພຣະວິນຍານຂອງພຣະອົງດົນໃຈເຈົ້າ ແລະ ຖ້າເຈົ້າປະຕິບັດຕາມການນຳພາຂອງພຣະວິນຍານບໍລິສຸດມາໃຊ້ຊີວິດຢູ່ຕໍ່ໜ້າພຣະເຈົ້າ, ເຈົ້າຈະເຮັດໃຫ້ພຣະເຈົ້າພໍໃຈ. ຖ້າເຈົ້າສົນໃຈໃຊ້ຊີວິດຢູ່ໃນພຣະທຳຂອງພຣະເຈົ້າ ແລະ ເຂົ້າຮ່ວມພົວພັນສົນທະນາກ່ຽວກັບຄວາມຈິງຫຼາຍຂຶ້ນເພື່ອຮັບແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະວິນຍານບໍລິສຸດ, ແລ້ວແນວຄິດຕ່າງໆນາໆກ່ຽວກັບສາສະໜາເຫຼົ່ານັ້ນ ແລະ ຄວາມໂອ້ອວດວ່າຕົນເອງຖືກສະເໝີ ແລະ ການໃຫ້ຄວາມສຳຄັນແກ່ຕົນເອງກໍຈະຫາຍໄປໝົດສິ້ນ; ເຈົ້າຈະຮູ້ຈັກວິທີສະຫຼະຕົນເອງເພື່ອພຣະເຈົ້າ, ວິທີຮັກພຣະເຈົ້າ ແລະ ວິທີເຮັດໃຫ້ພຣະເຈົ້າພໍໃຈ. ນອກຈາກນັ້ນ, ສິ່ງທີ່ບໍ່ກ່ຽວຂ້ອງກັບພຣະເຈົ້າເຫຼົ່ານັ້ນຈະຫາຍໄປຈາກຈິດສຳນຶກຂອງເຈົ້າໂດຍບໍ່ຮູ້ຕົວ.

ການໄຕ່ຕອງ ແລະ ອະທິຖານຕໍ່ພຣະທຳຂອງພຣະເຈົ້າໃນຂະນະທີ່ກິນ ແລະ ດື່ມພຣະທຳໃນປັດຈຸບັນຂອງພຣະອົງແມ່ນຂັ້ນຕອນທຳອິດທີ່ຈະຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້. ຖ້າເຈົ້າສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຢ່າງແທ້ຈິງ ແລ້ວແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດກໍຈະຢູ່ກັບເຈົ້າ. ຊີວິດຝ່າຍວິນຍານທັງໝົດບັນລຸຜົນດ້ວຍການຢູ່ໃນຄວາມສະຫງົບກັບການສະຖິດຂອງພຣະເຈົ້າ. ການອະທິຖານ, ເຈົ້າຕ້ອງຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ແລະ ພຽງເມື່ອນັ້ນເຈົ້າຈຶ່ງຈະສາມາດໄດ້ຮັບການສຳຜັດຈາກພຣະວິນຍານບໍລິສຸດ. ເມື່ອເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ, ເມື່ອເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າກໍຈະສາມາດໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງ ແລະ ສາມາດໄດ້ຮັບຄວາມເຂົ້າໃຈກ່ຽວກັບພຣະທຳຂອງພຣະເຈົ້າຢ່າງແທ້ຈິງ. ເມື່ອໃນກິດຈະກຳປົກກະຕິຂອງການຕັ້ງສະມາທິ, ການສຳພັນ ແລະ ການເຂົ້າມາຢູ່ໃກ້ພຣະເຈົ້າດ້ວຍຫົວໃຈຂອງເຈົ້າ ແລ້ວເຈົ້າກໍຈະມີຄວາມສະຫງົບຢູ່ກັບການສະຖິດຂອງພຣະເຈົ້າ, ເຈົ້າຈະສາມາດຊື່ນຊົມຄວາມໃກ້ຊິດກັບພຣະເຈົ້າຢ່າງແທ້ຈິງ, ສາມາດມີຄວາມເຂົ້າໃຈຢ່າງແທ້ຈິງກ່ຽວກັບຄວາມຮັກຂອງພຣະເຈົ້າ ແລະ ພາລະກິດຂອງພຣະອົງ ແລະ ສະແດງຄວາມນຶກຄິດ ແລະ ຄວາມໃສ່ໃຈຢ່າງແທ້ຈິງຕໍ່ຄວາມປະສົງຂອງພຣະເຈົ້າ. ຍິ່ງເຈົ້າສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າເປັນປົກກະຕິຫຼາຍເທົ່າໃດເຈົ້າກໍຈະໄດ້ຮັບແສງເຍືອງທາງ ແລະ ເຂົ້າໃຈເຖິງອຸປະນິໄສທີ່ເສື່ອມໂຊມຂອງຕົນເອງຫຼາຍເທົ່ານັ້ນ. ແມ່ນຫຍັງຄືສິ່ງທີ່ເຈົ້າຂາດ, ແມ່ນຫຍັງຄືສິ່ງທີ່ເຈົ້າຄວນເຂົ້າສູ່, ໜ້າທີ່ຫຍັງທີ່ເຈົ້າຄວນຮັບໃຊ້ ແລະ ຂໍ້ບົກຜ່ອງຂອງເຈົ້າຢູ່ບ່ອນໃດ. ທຸກສິ່ງນີ້ສາມາດບັນລຸຜົນໄດ້ໂດຍການຢູ່ໃນຄວາມສະຫງົບກັບການສະຖິດຂອງພຣະເຈົ້າ. ຖ້າເຈົ້າບັນລຸສ່ວນເລິກໃນການຢູ່ຢ່າງສະຫງົບຕໍ່ໜ້າພຣະເຈົ້າຢ່າງແທ້ຈິງ, ເຈົ້າຈະສາມາດເຂົ້າໃຈສິ່ງລຶກລັບບາງຢ່າງຂອງວິນຍານ, ເຂົ້າໃຈສິ່ງທີ່ພຣະເຈົ້າໃນປັດຈຸບັນຕ້ອງການປະຕິບັດໃນຕົວເຈົ້າ, ເຂົ້າໃຈຢ່າງເລິກເຊິ່ງໃນພຣະທຳຂອງພຣະເຈົ້າ, ເຂົ້າໃຈສ່ວນສຳຄັນຂອງພຣະທຳຂອງພຣະເຈົ້າ, ແກ່ນແທ້ຂອງພຣະທຳຂອງພຣະເຈົ້າ, ການເປັນຢູ່ຂອງພຣະທຳຂອງພຣະເຈົ້າ ແລະ ເຈົ້າຈະສາມາດເຫັນເສັ້ນທາງແຫ່ງການປະຕິບັດຢ່າງຊັດເຈນ ແລະ ຖືກຕ້ອງຫຼາຍຂຶ້ນ. ຖ້າເຈົ້າບໍ່ປະສົບຄວາມສຳເລັດຢ່າງເຕັມທີ່ກັບການມີຄວາມສະຫງົບໃນຈິດວິນຍານຂອງເຈົ້າ, ເຈົ້າຈະໄດ້ຮັບການດົນໃຈພຽງເລັກນ້ອຍ; ເຈົ້າຈະຮູ້ສຶກມີກຳລັງຢູ່ພາຍໃນ ແລະ ຈະຮູ້ສຶກມີຄວາມສຸກ ແລະ ຄວາມສະຫງົບ

ໃນລະດັບໃດໜຶ່ງ, ແຕ່ເຈົ້າຈະບໍ່ເຂົ້າໃຈສິ່ງທີ່ເລິກເຊິ່ງໄປກວ່ານັ້ນ. ເຮົາໄດ້ກ່າວກ່ອນໜ້ານີ້ແລ້ວ: ຖ້າມະນຸດບໍ່ນຳໃຊ້ກຳລັງທຸກສ່ວນຂອງພວກເຂົາ, ມັນຈະຍາກສຳລັບພວກເຂົາທີ່ຈະຍິນສຽງຂອງເຮົາ ຫຼື ເຫັນໜ້າເຮົາ. ສິ່ງນີ້ໝາຍເຖິງການບັນລຸໃນສ່ວນເລິກຂອງການມີຄວາມສະຫງົບຢູ່ຕໍ່ໜ້າພຣະເຈົ້າ ແລະ ບໍ່ແມ່ນພະຍາຍາມພຽງແຕ່ເຮັດແບບຜິວເຜີນເທົ່ານັ້ນ. ຄົນທີ່ສາມາດຢູ່ໃນຄວາມສະຫງົບໃນການສະຖິດຂອງພຣະເຈົ້າແມ່ນສາມາດເຮັດໃຫ້ຕົນເອງເປັນອິດສະຫຼະຈາກການຜູກມັດທັງໝົດຂອງໂລກ ແລະ ຈະໄດ້ຮັບຊັບສິນຈາກພຣະເຈົ້າ. ທຸກຄົນທີ່ບໍ່ສາມາດຢູ່ໃນຄວາມສະຫງົບຢູ່ຕໍ່ໜ້າພຣະເຈົ້າແມ່ນຄົນທີ່ດື້ດ້ານ ແລະ ໃຈແຕກທີ່ໂງ່ຈ້າທີ່ສຸດ. ທຸກຄົນທີ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າແມ່ນຄົນທີ່ມີຄວາມສັດທາຕໍ່ໜ້າພຣະເຈົ້າ ແລະ ຄົນທີ່ປາດຖະໜາຫາພຣະເຈົ້າ. ມີພຽງແຕ່ຄົນທີ່ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າເທົ່ານັ້ນທີ່ຮູ້ຄຸນຄ່າຂອງຊີວິດ, ຮູ້ຄຸນຄ່າຂອງຄວາມສຳພັນທາງວິນຍານ, ມີຄວາມຫິວກະຫາຍຫາພຣະທຳຂອງພຣະເຈົ້າ ແລະ ສະແຫວງຫາຄວາມຈິງ. ໃຜກໍຕາມທີ່ບໍ່ຮູ້ຄຸນຄ່າຂອງການຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ແລະ ບໍ່ປະຕິບັດເພື່ອໃຫ້ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າແມ່ນໄຮ້ປະໂຫຍດ ແລະ ບໍ່ສຳຄັນເລີຍ, ເຊິ່ງເປັນຄົນທີ່ຍຶດຕິດຢູ່ກັບຝ່າຍໂລກ ແລະ ປາສະຈາກຊີວິດ; ເຖິງແມ່ນວ່າ ພວກເຂົາຈະເວົ້າວ່າພວກເຂົາເຊື່ອໃນພຣະເຈົ້າ, ພວກເຂົາກໍພຽງເວົ້າແຕ່ປາກ. ຄົນທີ່ພຣະເຈົ້າຈະເຮັດໃຫ້ສົມບູນ ແລະ ບໍລິບູນໃນທີ່ສຸດ ແມ່ນຄົນທີ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະອົງ. ດ້ວຍເຫດນັ້ນ ຄົນທີ່ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າແມ່ນໄດ້ຮັບຄວາມກະລຸນາທີ່ເຕັມໄປດ້ວຍພອນອັນໃຫຍ່ຫຼວງ. ຄົນທີ່ຂີ້ຄ້ານໃຊ້ເວລາກິນ ແລະ ດື່ມພຣະທຳຂອງພຣະເຈົ້າໝົດມື້, ຄົນທີ່ຫຍຸ້ງຢູ່ກັບບັນຫາພາຍນອກ ແລະ ໃຫ້ຄວາມສຳຄັນພຽງເລັກນ້ອຍໃນການເຂົ້າສູ່ຊີວິດ, ຜູ້ຄົນເຫຼົ່ານີ້ແມ່ນຄົນໜ້າຊື່ໃຈຄົດທີ່ບໍ່ມີຄວາມຫວັງສຳລັບການເຕີບໂຕໃນອະນາຄົດ. ຜູ້ທີ່ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ແລະ ຜູ້ທີ່ສາມາດສື່ສານກັບພຣະເຈົ້າຢ່າງແທ້ຈິງແມ່ນປະຊາຊົນຂອງພຣະເຈົ້າ.

ການມາຢູ່ຕໍ່ໜ້າພຣະເຈົ້າ ແລະ ຍອມຮັບພຣະທຳຂອງພຣະອົງເປັນຊີວິດຂອງເຈົ້າ, ເຈົ້າຕ້ອງຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າກ່ອນ. ພຽງແຕ່ເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າເທົ່ານັ້ນ ພຣະເຈົ້າກໍຈະເຮັດໃຫ້ເຈົ້າມີຄວາມສະຫວ່າງ ແລະ ມອບຄວາມຮູ້ໃຫ້ກັບເຈົ້າ. ຍິ່ງມະນຸດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຫຼາຍເທົ່າໃດ ພວກເຂົາກໍຈະສາມາດຮັບແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະເຈົ້າຫຼາຍຂຶ້ນເທົ່ານັ້ນ. ທຸກສິ່ງນີ້ຕ້ອງການໃຫ້ມະນຸດມີຄວາມກະຕະເວທີ ແລະ ຄວາມເຊື່ອ; ດ້ວຍວິທີນີ້ເທົ່ານັ້ນ ພວກເຂົາຈຶ່ງຈະຖືກເຮັດໃຫ້ສົມບູນ. ບົດຮຽນທີ່ສຳຄັນສຳລັບການເຂົ້າສູ່ຊີວິດຝ່າຍວິນຍານແມ່ນການຢູ່ໃນຄວາມສະຫງົບກັບການສະຖິດຂອງພຣະເຈົ້າ. ພຽງແຕ່ເຈົ້າຢູ່ໃນຄວາມສະຫງົບກັບການສະຖິດຂອງພຣະເຈົ້າ ການຝຶກຝົນຝ່າຍວິນຍານຂອງເຈົ້າທັງໝົດກໍຈະມີປະສິດຕິພາບ. ຖ້າຫົວໃຈຂອງເຈົ້າບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ເຈົ້າກໍຈະບໍ່ສາມາດຮັບພາລະກິດຂອງພຣະວິນຍານບໍລິສຸດໄດ້. ຖ້າຫົວໃຈຂອງເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ, ເຈົ້າກໍຈະເປັນຄົນທີ່ໃຊ້ຊີວິດຢູ່ກັບພຣະເຈົ້າ. ຖ້າຫົວໃຈຂອງເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ແລະ ເຂົ້າມາໃກ້ພຣະເຈົ້າ ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ, ສິ່ງນີ້ພິສູດໃຫ້ເຫັນແລ້ວວ່າ ເຈົ້າເປັນ

ຄົນທີ່ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ເມື່ອເຈົ້າກຳລັງສົນທະນາກັບຄົນອື່ນ ຫຼື ກຳລັງຍ່າງ, ຖ້າເຈົ້າສາມາດເວົ້າວ່າ, "ຫົວໃຈຂອງຂ້ານ້ອຍກຳລັງເຂົ້າໃກ້ພຣະເຈົ້າ ແລະ ຂ້ານ້ອຍບໍ່ສົນໃຈໃນສິ່ງພາຍນອກ ແລະ ຂ້ານ້ອຍສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ", ເຈົ້າກໍເປັນຄົນທີ່ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າແລ້ວ. ຢ່າເຂົ້າຮ່ວມສິ່ງໃດກໍຕາມທີ່ດຶງຫົວໃຈຂອງເຈົ້າສູ່ບັນຫາພາຍນອກ ຫຼື ກັບຄົນທີ່ດຶງຫົວໃຈຂອງເຈົ້າອອກຈາກພຣະເຈົ້າ. ບໍ່ວ່າສິ່ງໃດກໍຕາມທີ່ສາມາດດຶງຫົວໃຈຂອງເຈົ້າອອກຈາກການເຂົ້າໃກ້ຊິດກັບພຣະເຈົ້າ, ຈົ່ງປະຖິ້ມສິ່ງນັ້ນ ແລະ ຢູ່ຫ່າງໆຈາກມັນ. ນີ້ຄືຜົນປະໂຫຍດອັນຍິ່ງໃຫຍ່ສຳລັບຊີວິດຂອງເຈົ້າ. ແນ່ນອນ ນີ້ຄືເວລາແຫ່ງພາລະກິດອັນຍິ່ງໃຫຍ່ຂອງພຣະວິນຍານບໍລິສຸດ, ເປັນເວລາທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນແບບດ້ວຍຕົວພຣະອົງເອງ. ໃນເວລານີ້ ຖ້າເຈົ້າບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ, ເຈົ້າກໍບໍ່ແມ່ນຄົນທີ່ໄດ້ກັບຄືນມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ. ຖ້າເຈົ້າສະແຫວງຫາສິ່ງທີ່ນອກເໜືອຈາກພຣະເຈົ້າ, ເຈົ້າຈະບໍ່ມີຫົນທາງທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້. ຄົນທີ່ສາມາດໄດ້ຍິນຂໍ້ຄວາມພຣະທຳດັ່ງກ່າວຈາກພຣະເຈົ້າ ແຕ່ບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະອົງໃນປັດຈຸບັນໄດ້ ແມ່ນຄົນທີ່ບໍ່ຮັກຄວາມຈິງ ແລະ ບໍ່ຮັກພຣະເຈົ້າ. ຖ້າເຈົ້າບໍ່ຖວາຍຕົນເອງໃນເວລານີ້ ແລ້ວເຈົ້າກຳລັງລໍຖ້າຫຍັງຢູ່? ການຖວາຍຕົນເອງແມ່ນການເຮັດໃຫ້ຫົວໃຈຂອງຕົນເອງສະຫງົບຢູ່ຕໍ່ໜ້າພຣະເຈົ້າ. ນັ້ນແມ່ນເປັນການຖວາຍຢ່າງແທ້ຈິງ. ໃຜກໍຕາມທີ່ມອບຫົວໃຈໃຫ້ກັບພຣະເຈົ້າໃນຕອນນີ້ຢ່າງແທ້ຈິງ ແມ່ນໃຫ້ໝັ້ນໃຈໄດ້ເລີຍວ່າຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ບໍ່ມີສິ່ງໃດ, ບໍ່ວ່າມັນຈະເປັນສິ່ງໃດກໍຕາມ ທີ່ຈະສາມາດລົບກວນເຈົ້າໄດ້; ບໍ່ວ່າເຈົ້າຈະຖືກລິຮານແນວໃດກໍຕາມ ຫຼື ຖືກຈັດການ ຫຼື ບໍ່ວ່າເຈົ້າຈະພົບກັບຄວາມຜິດຫວັງ ຫຼື ຄວາມລົ້ມເຫຼວ, ຫົວໃຈຂອງເຈົ້າຄວນຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຕະຫຼອດເວລາ. ບໍ່ວ່າຄົນຈະປະຕິບັດຕໍ່ເຈົ້າແນວໃດ, ຫົວໃຈຂອງເຈົ້າຄວນຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ບໍ່ວ່າເຈົ້າຈະພົບກັບສະຖານະການຫຍັງກໍຕາມເຊັ່ນ: ຜະເຊີນກັບຄວາມຍາກລຳບາກ, ຄວາມທົນທຸກທໍລະມານ, ການຂົ່ມເຫັງ ຫຼື ການທົດລອງຕ່າງໆ, ຫົວໃຈຂອງເຈົ້າຄວນຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຕະຫຼອດເວລາ; ສິ່ງນັ້ນຄືເສັ້ນທາງສູ່ການຖືກເຮັດໃຫ້ສົມບູນແບບ. ພຽງແຕ່ເຈົ້າຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຢ່າງແທ້ຈິງເທົ່ານັ້ນພຣະທຳໃນປັດຈຸບັນຂອງພຣະເຈົ້າກໍຈະຊັດເຈນກັບເຈົ້າ. ຫລັງຈາກນັ້ນ ເຈົ້າກໍຈະສາມາດປະຕິບັດຕາມແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດໄດ້ຢ່າງຖືກຕ້ອງຫຼາຍຂຶ້ນໂດຍບໍ່ມີການຜັນປ່ຽນ; ເຈົ້າຈະສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າຢ່າງຈະແຈ້ງຫຼາຍຂຶ້ນ, ເຂົ້າໃຈທິດທາງທີ່ຊັດເຈນໃນການຮັບໃຊ້ຂອງເຈົ້າ, ເຂົ້າໃຈການເຄື່ອນໄຫວ ແລະ ການນຳພາຂອງພຣະວິນຍານບໍລິສຸດຢ່າງຖືກຕ້ອງ ແລະ ໝັ້ນໃຈໃນການມີຊີວິດພາຍໃຕ້ການນຳພາຂອງພຣະວິນຍານບໍລິສຸດ. ສິ່ງດັ່ງກ່າວແມ່ນຜົນທີ່ໄດ້ຮັບຈາກການສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຢ່າງແທ້ຈິງ. ເມື່ອມະນຸດບໍ່ຊັດເຈນກ່ຽວກັບພຣະທຳຂອງພຣະເຈົ້າ, ບໍ່ມີເສັ້ນທາງສູ່ການປະຕິບັດຕົວຈິງ, ບໍ່ສາມາດທີ່ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າ ຫຼື ປາສະຈາກຫຼັກການການປະຕິບັດຕົວຈິງ, ສິ່ງນີ້ເກີດຂຶ້ນກໍຍ້ອນຫົວໃຈຂອງພວກເຂົາບໍ່ຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ຈຸດປະສົງຂອງການມີຄວາມສະຫງົບຕໍ່ໜ້າ

ພຣະເຈົ້າແມ່ນເພື່ອຄວາມສັດຊື່ ແລະ ຄວາມເປັນຈິງ, ການສະແຫວງຫາຄວາມຖືກຕ້ອງ ແລະ ຄວາມໂປ່ງໃສໃນພຣະທຳຂອງພຣະເຈົ້າ ແລະ ໃນທີ່ສຸດກໍຄື ການມາເຖິງຄວາມເຂົ້າໃຈໃນຄວາມຈິງ ແລະ ການຮູ້ຈັກພຣະເຈົ້າ.

ຖ້າຫົວໃຈຂອງເຈົ້າບໍ່ມັກຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ພຣະເຈົ້າກໍບໍ່ມີວິທີທີ່ຈະເຮັດໃຫ້ເຈົ້າສົມບູນ. ການຂາດຄວາມຕັດສິນໃຈແມ່ນເທົ່າກັບການບໍ່ມີຫົວໃຈ ແລະ ຄົນທີ່ບໍ່ມີຫົວໃຈບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້; ຄົນປະເພດດັ່ງກ່າວບໍ່ຮູ້ວ່າ ພຣະເຈົ້າປະຕິບັດພາລະກິດຫຼາຍພຽງໃດ ຫຼື ພຣະອົງກ່າວຂໍ້ພຣະທຳໜ້ອຍຫຼາຍພຽງໃດ ຫຼື ພວກເຂົາບໍ່ຮູ້ວິທີຈະປະຕິບັດຕົວຈິງແນວໃດ. ນີ້ບໍ່ແມ່ນຄົນທີ່ປາສະຈາກຫົວໃຈບໍ? ຄົນທີ່ບໍ່ມີຫົວໃຈສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້ບໍ? ພຣະເຈົ້າບໍ່ມີຈຸດປະສົງທີ່ຈະເຮັດໃຫ້ຄົນບໍ່ມີຫົວໃຈສົມບູນ ເຊິ່ງພວກເຂົາບໍ່ແຕກຕ່າງຈາກສັດເດຍລະສານທີ່ເປັນພາລະໃຫ້ກັບພຣະອົງ. ພຣະເຈົ້າໄດ້ກ່າວໄວ້ຢ່າງຊັດເຈນ ແລະ ແຈ່ມແຈ້ງຫຼາຍແລ້ວ, ແຕ່ຫົວໃຈຂອງເຈົ້າບໍ່ມີຄວາມຮູ້ສຶກຫຍັງເລີຍ ແລະ ເຈົ້າຍັງບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້ອີກ. ເຈົ້າບໍ່ແມ່ນສັດເດຍລະສານນັ້ນບໍ? ບາງຄົນຫຼົງທາງໃນການປະຕິບັດເພື່ອຫວັງຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ເມື່ອຮອດເວລາຄົວກິນ, ພວກເຂົາບໍ່ຄົວກິນ ແລະ ເມື່ອຮອດເວລາເຮັດວຽກເຮືອນ, ພວກເຂົາກໍບໍ່ເຮັດ ພຽງແຕ່ພາກັນອະທິຖານ ແລະ ຕຶກຕອງເທົ່ານັ້ນ. ການຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າບໍ່ໄດ້ໝາຍເຖິງການຄົວກິນ ຫຼື ການເຮັດວຽກເຮືອນ ຫຼື ການມີຊີວິດຂອງຄົນໃດໜຶ່ງ; ກົງກັນຂ້າມ ມັນຄືຄວາມສາມາດໃນການເຮັດໃຫ້ຫົວໃຈຂອງຄົນໜຶ່ງສະຫງົບຕໍ່ໜ້າພຣະເຈົ້າແບບສະພາວະປົກກະຕິ ແລະ ການເຮັດໃຫ້ຫົວໃຈຄົນໃດໜຶ່ງມີບ່ອນຫວ່າງສຳລັບພຣະເຈົ້າ. ເມື່ອເຈົ້າອະທິຖານ, ເຈົ້າຄວນຄຸເຂົ່າລົງໃຫ້ເໝາະສົມຢູ່ຕໍ່ໜ້າພຣະເຈົ້າເພື່ອອະທິຖານ; ເມື່ອເຈົ້າເຮັດວຽກເຮືອນ ຫຼື ຈັດກຽມອາຫານ, ຈົ່ງເຮັດໃຫ້ຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າ, ໄຕ່ຕອງພຣະທຳຂອງພຣະເຈົ້າ ຫຼື ຮ້ອງເພງສັນລະເສີນພຣະອົງ. ບໍ່ວ່າເຈົ້າຈະຢູ່ໃນສະຖານະການໃດໆກໍຕາມ, ເຈົ້າຄວນມີວິທີການປະຕິບັດຂອງເຈົ້າເອງ, ເຈົ້າຄວນເຮັດທຸກຢ່າງທີ່ເຈົ້າສາມາດເຮັດໄດ້ເພື່ອເຂົ້າໃກ້ຊິດພຣະເຈົ້າ ແລະ ເຈົ້າຄວນພະຍາຍາມດ້ວຍກຳລັງທັງໝົດຂອງເຈົ້າເພື່ອເຮັດໃຫ້ຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າ. ເມື່ອສະຖານະການເອື້ອອຳນວຍ, ຈົ່ງອະທິຖານຢ່າງເດັດດ່ຽວ; ເມື່ອສະຖານະການບໍ່ເອື້ອອຳນວຍ, ຈົ່ງເຂົ້າໃກ້ພຣະເຈົ້າດ້ວຍຫົວໃຈຂອງເຈົ້າ ໃນຂະນະທີ່ເຮັດໜ້າທີ່ຂອງຕົນ. ເມື່ອເຈົ້າສາມາດກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ກໍຈົ່ງກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ເມື່ອເຈົ້າສາມາດອະທິຖານ ກໍຈົ່ງອະທິຖານ; ເມື່ອເຈົ້າສາມາດຕຶກຕອງກ່ຽວກັບພຣະເຈົ້າ ກໍຈົ່ງຕຶກຕອງກ່ຽວກັບພຣະອົງ. ຖ້າຈະເວົ້າອີກແບບໜຶ່ງກໍຄື ຈົ່ງເຮັດໃຫ້ເຖິງທີ່ສຸດເພື່ອຝຶກຝົນຕົວເຈົ້າເອງໃນການເຂົ້າສູ່ຊີວິດ ໂດຍອີງຕາມສະພາບແວດລ້ອມຂອງເຈົ້າ. ບາງຄົນສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ ເມື່ອບໍ່ມີບັນຫາຫຍັງ, ແຕ່ເມື່ອມີບາງສິ່ງເກີດຂຶ້ນ, ຄວາມຄິດຂອງພວກເຂົາກໍເລື່ອນລອຍ. ນັ້ນບໍ່ແມ່ນການຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ວິທີທາງທີ່ຈະມີປະສົບການຢ່າງຖືກຕ້ອງຄື: ຫົວໃຈຂອງຄົນຕ້ອງບໍ່ອອກຫ່າງຈາກພຣະເຈົ້າ ບໍ່ວ່າຢູ່ພາຍໃຕ້ສະຖານະການໃດໆກໍຕາມ ຫຼື ຮູ້ສຶກຖືກລົບກວນໂດຍຄົນພາຍ

ນອກ, ເຫດການ ຫຼື ສິ່ງໃດກໍຕາມ, ດ້ວຍວິທີນີ້ເທົ່ານັ້ນຜູ້ຄົນຈຶ່ງຈະຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າຢ່າງແທ້ຈິງໄດ້. ບາງຄົນເວົ້າວ່າ ເມື່ອພວກເຂົາອະທິຖານຢູ່ໃນການຊຸມນຸມ, ຫົວໃຈຂອງພວກເຂົາສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ, ແຕ່ໃນເວລາພົບປະສົນທະນາກັບຄົນອື່ນ ພວກເຂົາບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້ ແລະ ຄວາມຄິດຂອງພວກເຂົາກໍວຸ້ນວາຍ. ນີ້ບໍ່ແມ່ນການຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າ. ໃນປັດຈຸບັນນີ້ ຄົນສ່ວນຫຼາຍແມ່ນຕົກຢູ່ໃນສະພາວະນີ້, ຫົວໃຈຂອງພວກເຂົາບໍ່ສາມາດຢູ່ໃນຄວາມສະຫງົບຕໍ່ໜ້າພຣະເຈົ້າໄດ້ຕະຫຼອດເວລາ. ດ້ວຍເຫດນັ້ນພວກເຈົ້າຕ້ອງພະຍາຍາມຫຼາຍຂຶ້ນກວ່າເກົ່າເພື່ອຝຶກຝົນຕົນເອງໃຫ້ຢູ່ໃນຈຸດນີ້, ເພື່ອເຂົ້າສູ່ເສັ້ນທາງທີ່ຖືກຕ້ອງແຫ່ງປະສົບການຂອງຊີວິດເທື່ອລະຂັ້ນຕອນ ແລະ ເລີ່ມລົງມືປະຕິບັດຕາມເສັ້ນທາງແຫ່ງການສົມບູນແບບຂອງພຣະເຈົ້າ.

# ໃຫ້ໃສ່ໃຈຄວາມປະສົງຂອງ ພຣະເຈົ້າເພື່ອບັນລຸຄວາມສົມບູນ

ຍິ່ງເຈົ້າໃສ່ໃຈໃນຄວາມປະສົງຂອງພຣະເຈົ້າຫຼາຍສໍ່າໃດ, ເຈົ້າກໍຍິ່ງມີພາລະຫຼາຍຂຶ້ນສໍ່ານັ້ນ; ຍິ່ງເຈົ້າມີພາລະຫຼາຍຂຶ້ນ, ປະສົບການຂອງເຈົ້າກໍຍິ່ງເພີ່ມພູນຂຶ້ນສໍ່ານັ້ນ. ເມື່ອເຈົ້າໃສ່ໃຈໃນຄວາມປະສົງຂອງພຣະເຈົ້າ, ພຣະເຈົ້າຈະມອບພາລະນີ້ໃຫ້ກັບເຈົ້າ ແລະ ພຣະເຈົ້າຈະສ່ອງແສງສະຫວ່າງໃຫ້ກັບເຈົ້າກ່ຽວກັບວຽກງານຕ່າງໆທີ່ພຣະອົງໄດ້ມອບໝາຍໃຫ້ກັບເຈົ້າ. ຫຼັງຈາກທີ່ພຣະເຈົ້າໄດ້ມອບພາລະນີ້ໃຫ້ກັບເຈົ້າ, ເຈົ້າຈະໃສ່ໃຈຄວາມຈິງທີ່ກ່ຽວຂ້ອງທັງໝົດໃນຂະນະທີ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ. ຖ້າເຈົ້າມີພາລະທີ່ກ່ຽວຂ້ອງກັບສະພາວະໃນຊີວິດຂອງອ້າຍເອື້ອຍນ້ອງ, ແລ້ວນີ້ກໍຄືພາລະທີ່ພຣະເຈົ້າໄດ້ມອບໝາຍໃຫ້ກັບເຈົ້າ ແລະ ເຈົ້າຈະຕ້ອງແບກຫາບພາລະນີ້ຢູ່ໃນຄຳອະທິຖານປະຈຳວັນຂອງເຈົ້າສະເໝີ. ສິ່ງທີ່ພຣະເຈົ້າກະທຳແມ່ນໄດ້ຝາກຝັງໃຫ້ກັບເຈົ້າແລ້ວ, ເຈົ້າເຕັມໃຈທີ່ຈະປະຕິບັດສິ່ງທີ່ພຣະເຈົ້າຕ້ອງການເຮັດ; ນີ້ແມ່ນຄວາມໝາຍຂອງການຮັບພາລະຂອງພຣະເຈົ້າມາເປັນພາລະຂອງເຈົ້າເອງ. ໃນຈຸດນີ້, ການທີ່ເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າຈະແນໃສ່ບັນຫາໃນລັກສະນະເຫຼົ່ານີ້ ແລະ ເຈົ້າຈະຄິດວ່າ ຂ້ານ້ອຍຈະແກ້ໄຂບັນຫານີ້ໄດ້ແນວໃດ? ຂ້ານ້ອຍຈະເຮັດໃຫ້ອ້າຍເອື້ອຍນ້ອງຖືກປົດປ່ອຍໃຫ້ເປັນອິດສະຫຼະ, ໃຫ້ມີຄວາມສຸກທາງຝ່າຍວິນຍານຂອງພວກເຂົາໄດ້ແນວໃດ? ເຈົ້າຈະໃສ່ໃຈກັບການແກ້ໄຂບັນຫາເຫຼົ່ານີ້ ເມື່ອເຈົ້າຢູ່ໃນການສົນທະນາ ແລະ ເມື່ອເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າຈະໃສ່ໃຈໃນການກິນ ແລະ ດື່ມພຣະທຳທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ເຈົ້າຍັງຈະໄດ້ແບກຫາບພາລະໃນຂະນະທີ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າອີກດ້ວຍ. ຫຼັງຈາກທີ່ເຈົ້າໄດ້ເຂົ້າໃຈເຖິງຄວາມຕ້ອງການຂອງພຣະເຈົ້າ, ເຈົ້າຈະມີຄວາມຄິດທີ່ຊັດເຈນຂຶ້ນກ່ຽວກັບເສັ້ນທາງທີ່ຈະຍ່າງ. ນີ້ແມ່ນແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດທີ່ເກີດຂຶ້ນຈາກພາລະຂອງເຈົ້າ ແລະ ນີ້ແມ່ນການຊີ້ນຳຂອງພຣະເຈົ້າທີ່ພຣະອົງໄດ້ປະທານໃຫ້ກັບເຈົ້າ. ເປັນຫຍັງເຮົາຈຶ່ງເວົ້າແບບນີ້? ຖ້າເຈົ້າບໍ່ມີພາລະ, ແລ້ວເຈົ້າກໍຈະບໍ່ໃສ່ໃຈ ໃນຂະນະທີ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ເມື່ອເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃນຂະນະທີ່ແບກຮັບພາລະ, ເຈົ້າກໍຈະສາມາດເຂົ້າໃຈເຖິງໃຈຄວາມສຳຄັນຂອງພຣະທຳຂອງພຣະເຈົ້າ, ຄົ້ນພົບຫົນທາງຂອງເຈົ້າ ແລະ ໃສ່ໃຈໃນຄວາມປະສົງຂອງພຣະເຈົ້າ. ສະນັ້ນ, ໃນຄຳອະທິຖານຂອງເຈົ້າ, ເຈົ້າຄວນອ້ອນວອນພຣະເຈົ້າໃຫ້ມອບພາລະໃຫ້ກັບເຈົ້າຫຼາຍຂຶ້ນ ແລະ ຝາກຝັງວຽກງານທີ່ຍິ່ງໃຫຍ່ໃຫ້ກັບເຈົ້າຫຼາຍຂຶ້ນ ເພື່ອວ່າ ໃນຂ້າງໜ້າ ເຈົ້າອາດຈະມີເສັ້ນທາງແຫ່ງການປະຕິບັດຫຼາຍຂຶ້ນ; ເພື່ອວ່າ ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າຈະມີປະສິດທິພາບຫຼາຍຂຶ້ນ; ເພື່ອວ່າເຈົ້າຈະສາມາດເລີ່ມເຂົ້າໃຈເຖິງໃຈແກ່ນແທ້ໃນພຣະທຳຂອງພຣະອົງ; ແລະ ເພື່ອວ່າເຈົ້າຈະສາມາດຖືກພຣະວິນຍານບໍລິສຸດດົນບັນດານຫຼາຍຂຶ້ນ.

ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ການຝຶກອະທິຖານ, ການຍອມຮັບພາລະຂອງພຣະເຈົ້າ, ການຍອມຮັບໜ້າທີ່ທີ່ພຣະອົງຝາກຝັງໄວ້ກັບເຈົ້າ, ທຸກສິ່ງນີ້ແມ່ນເພື່ອວ່າ ມັນອາດຈະມີ

ເສັ້ນທາງຢູ່ຕໍ່ໜ້າເຈົ້າ. ຍິ່ງເຈົ້າມີພາລະຈາກການຝາກຝັງຂອງພຣະເຈົ້າໜັກຫຼາຍສໍ່າໃດ, ມັນກໍຈະງ່າຍຂຶ້ນສຳລັບເຈົ້າທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນຫຼາຍສໍ່ານັ້ນ. ບາງຄົນບໍ່ເຕັມໃຈທີ່ຈະຮ່ວມມືກັບຄົນອື່ນໃນການຮັບໃຊ້ພຣະເຈົ້າ ແມ່ນແຕ່ໃນເວລາທີ່ພວກເຂົາຖືກເອີ້ນຫາ; ຄົນເຫຼົ່ານີ້ເປັນຄົນທີ່ຂີ້ຄ້ານ ທີ່ຕ້ອງການພຽງແຕ່ເຮຣາຢູ່ກັບຄວາມສຸກສະບາຍ. ຍິ່ງເຈົ້າຖືກຮຽກຮ້ອງໃຫ້ຮ່ວມມືກັບຄົນອື່ນໃນການຮັບໃຊ້ພຣະເຈົ້າຫຼາຍສໍ່າໃດ, ເຈົ້າກໍຍິ່ງຈະໄດ້ຮັບປະສົບການຫຼາຍສໍ່ານັ້ນ. ຍ້ອນເຈົ້າມີພາລະ ແລະ ປະສົບການຫຼາຍຂຶ້ນ, ເຈົ້າກໍຈະມີໂອກາດຫຼາຍຂຶ້ນທີ່ຈະຖືກເຮັດໃຫ້ສົມບູນ. ສະນັ້ນ, ຖ້າເຈົ້າສາມາດຮັບໃຊ້ພຣະເຈົ້າດ້ວຍຄວາມຈິງໃຈ ເຈົ້າຈະໃສ່ໃຈໃນພາລະຂອງພຣະເຈົ້າ; ດ້ວຍວິທີນີ້ ເຈົ້າຈະມີໂອກາດຫຼາຍຂຶ້ນທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ມັນຄືກຸ່ມຄົນດັ່ງກ່າວນີ້ທີ່ກຳລັງຖືກເຮັດໃຫ້ສົມບູນໃນເວລານີ້. ຍິ່ງພຣະວິນຍານບໍລິສຸດດົນໃຈເຈົ້າຫຼາຍສໍ່າໃດ, ເຈົ້າກໍຍິ່ງຈະອຸທິດເວລາເພື່ອໃສ່ໃຈໃນພາລະຂອງພຣະເຈົ້າຫຼາຍສໍ່ານັ້ນ, ເຈົ້າຍິ່ງຈະຖືກພຣະເຈົ້າເຮັດໃຫ້ສົມບູນຫຼາຍສໍ່ານັ້ນ ແລະ ເຈົ້າຍິ່ງຈະຖືກພຣະເຈົ້າຮັບເອົາຫຼາຍສໍ່ານັ້ນ ແລະ ຈົນກວ່າ ໃນທີ່ສຸດເຈົ້າກໍຈະກາຍມາເປັນຄົນທີ່ພຣະເຈົ້າໃຊ້. ໃນປັດຈຸບັນນີ້, ມີບາງຄົນທີ່ບໍ່ໄດ້ແບກຮັບພາລະຫຍັງເລີຍສຳລັບຄຣິສຕະຈັກ. ຄົນເຫຼົ່ານີ້ຂີ້ຄ້ານ ແລະ ບໍ່ເອົາໃຈໃສ່ ແລະ ພຽງແຕ່ສົນໃຈກັບເນື້ອໜັງຂອງພວກເຂົາເອງເທົ່ານັ້ນ. ຜູ້ຄົນດັ່ງກ່າວເຫັນແກ່ຕົວເກີນໄປ ແລະ ພວກເຂົາຍັງຕາບອດອີກດ້ວຍ. ຖ້າເຈົ້າບໍ່ສາມາດເຫັນບັນຫານີ້ຢ່າງຊັດເຈນ, ເຈົ້າກໍຈະບໍ່ແບກຮັບພາລະໃດໆເລີຍ. ຍິ່ງເຈົ້າໃສ່ໃຈໃນຄວາມປະສົງຂອງພຣະເຈົ້າຫຼາຍສໍ່າໃດ, ພາລະທີ່ພຣະເຈົ້າຝາກຝັງໄວ້ກັບເຈົ້າກໍຈະຫຼາຍຂຶ້ນສໍ່ານັ້ນ. ຄົນເຫັນແກ່ຕົວບໍ່ເຕັມໃຈທີ່ຈະທົນທຸກກັບສິ່ງເຫຼົ່ານັ້ນ, ພວກເຂົາບໍ່ເຕັມໃຈທີ່ຈະຈ່າຍລາຄາ ແລະ ຜົນຕາມມາກໍຄື ພວກເຂົາຈະພາດໂອກາດທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ພວກເຂົາບໍ່ແມ່ນທຳຮ້າຍຕົນເອງບໍ? ຖ້າເຈົ້າເປັນຄົນທີ່ໃສ່ໃຈໃນຄວາມປະສົງຂອງພຣະເຈົ້າ, ເຈົ້າຈະມີພາລະທີ່ແທ້ຈິງສຳລັບຄຣິສຕະຈັກ. ຄວາມເປັນຈິງແລ້ວ, ແທນທີ່ຈະເອີ້ນສິ່ງນີ້ວ່າເປັນພາລະທີ່ເຈົ້າແບກຮັບເພື່ອຄຣິສຕະຈັກ, ມັນຈະດີກວ່າທີ່ຈະເອີ້ນວ່າເປັນພາລະທີ່ເຈົ້າແບກຮັບເພື່ອຊີວິດຂອງເຈົ້າເອງ, ເພາະຈຸດປະສົງຂອງພາລະນີ້ທີ່ເຈົ້າແບກຮັບສຳລັບຄຣິສຕະຈັກແມ່ນເພື່ອເຈົ້າຈະໄດ້ໃຊ້ປະສົບການດັ່ງກ່າວເພື່ອຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ສະນັ້ນ, ໃຜກໍຕາມທີ່ແບກຮັບພາລະທີ່ໜັກທີ່ສຸດສຳລັບຄຣິສຕະຈັກ ແລະ ໃຜກໍຕາມທີ່ແບກຮັບພາລະຂອງການເຂົ້າສູ່ຊີວິດ ກໍຈະເປັນຄົນທີ່ຖືກພຣະເຈົ້າເຮັດໃຫ້ສົມບູນ. ເຈົ້າເຫັນສິ່ງນີ້ຢ່າງຊັດເຈນແລ້ວບໍ? ຖ້າຄຣິສຕະຈັກທີ່ເຈົ້າຢູ່ນັ້ນແຕກກະຈາຍຄືດິນຊາຍ ແຕ່ເຈົ້າບໍ່ໄດ້ກັງວົນ ຫຼື ເປັນຫ່ວງ ແລະ ເຈົ້າເຖິງກັບເຮັດເປັນບໍ່ຮູ້ບໍ່ເຫັນເມື່ອອ້າຍເອື້ອຍນ້ອງຂອງເຈົ້າບໍ່ໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງປົກກະຕິ, ແລ້ວເຈົ້າກໍບໍ່ໄດ້ແບກຮັບພາລະໃດໆເລີຍ. ພຣະເຈົ້າບໍ່ມັກຄົນປະເພດດັ່ງກ່າວ. ຄົນທີ່ພຣະເຈົ້າມັກ ແມ່ນຄົນທີ່ຫິວ ແລະ ກະຫາຍຫາຄວາມຊອບທຳ ແລະ ພວກເຂົາໃສ່ໃຈໃນຄວາມປະສົງຂອງພຣະອົງ. ສະນັ້ນ ພວກເຈົ້າຄວນຕັ້ງໃຈໃນພາລະຂອງພຣະເຈົ້າໃນຕອນນີ້. ເຈົ້າບໍ່ຄວນລໍຖ້າໃຫ້ອຸປະນິໄສທີ່ຊອບທຳຂອງພຣະເຈົ້າເປີດເຜີຍອອກໃຫ້ມະນຸດທຸກຄົນໄດ້ເຫັນ ກ່ອນທີ່ເຈົ້າຈະເລີ່ມໃສ່ໃຈໃນພາລະຂອງພຣະເຈົ້າ. ແລ້ວຕອນນັ້ນມັນຈະບໍ່ຊ້າເກີນໄປບໍ? ຕອນນີ້ແມ່ນໂອກາດດີທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ຖ້າເຈົ້າປ່ອຍໃຫ້ໂອກາດນີ້ຫຼຸດມື

ເຈົ້າໄປ, ເຈົ້າຈະເສຍດາຍຕະລອດຊີວິດ, ຄືກັບທີ່ໂມເຊບໍ່ສາມາດເຂົ້າສູ່ດິນແດນແຫ່ງການາອານທີ່ອຸດົມສົມບູນ ແລະ ເພິ່ນກໍເສຍດາຍຕະລອດຊີວິດຂອງເພິ່ນ ແລ້ວຕາຍດ້ວຍຄວາມເສຍໃຈ. ເມື່ອອຸປະນິໄສທີ່ຊອບທຳຂອງພຣະເຈົ້າຖືກເປີດເຜີຍໃຫ້ກັບທຸກຄົນ, ເຈົ້າຈະເຕັມໄປດ້ວຍຄວາມເສຍໃຈ. ເຖິງແມ່ນວ່າພຣະເຈົ້າຈະບໍ່ຂ້ຽນຕີເຈົ້າ, ເຈົ້າກໍຈະຂ້ຽນຕີຕົນເອງເນື່ອງຈາກຄວາມເສຍໃຈຂອງເຈົ້າເອງ. ບາງຄົນບໍ່ເຊື່ອໃນສິ່ງນີ້, ແຕ່ຖ້າເຈົ້າບໍ່ເຊື່ອ, ກໍໃຫ້ລໍຖ້າ ແລະ ເບິ່ງ. ບາງຄົນມີຈຸດປະສົງດຽວຄືປະຕິບັດຕາມພຣະທຳເຫຼົ່ານີ້. ເຈົ້າເຕັມໃຈທີ່ຈະເສຍສະຫຼະຕົນເອງເພື່ອພຣະທຳເຫຼົ່ານີ້ບໍ?

ຖ້າເຈົ້າບໍ່ສະແຫວງຫາໂອກາດທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ ແລະ ຖ້າເຈົ້າບໍ່ພະຍາຍາມຢູ່ແຖວໜ້າຝູງຊົນໃນການສະແຫວງຫາການເຮັດໃຫ້ສົມບູນ, ແລ້ວເຈົ້າກໍຈະເຕັມໄປດ້ວຍຄວາມເສຍໃຈໃນທີ່ສຸດ. ຕອນນີ້ແມ່ນໂອກາດດີທີ່ສຸດທີ່ຈະຖືກເຮັດໃຫ້ສົມບູນ; ນີ້ແມ່ນເວລາທີ່ດີທີ່ສຸດ. ຖ້າເຈົ້າບໍ່ສະແຫວງຫາເພື່ອຖືກພຣະເຈົ້າເຮັດໃຫ້ສົມບູນຢ່າງຈິງຈັງ, ເມື່ອພາລະກິດຂອງພຣະອົງໄດ້ສິ້ນສຸດລົງມັນກໍຈະຊ້າເກີນໄປແລ້ວ, ເຈົ້າຈະພາດໂອກາດນີ້. ບໍ່ວ່າຄວາມປາຖະໜາຂອງເຈົ້າຈະຍິ່ງໃຫຍ່ສໍ່າໃດກໍຕາມ, ຖ້າພຣະເຈົ້າບໍ່ປະຕິບັດພາລະກິດອີກຕໍ່ໄປ, ບໍ່ວ່າເຈົ້າຈະໃຊ້ຄວາມພະຍາຍາມແນວໃດກໍຕາມ, ເຈົ້າກໍຈະບໍ່ສາມາດຖືກເຮັດໃຫ້ສົມບູນຈັກເທື່ອ. ເຈົ້າຕ້ອງຄວ້າໂອກາດນີ້ ແລະ ຮ່ວມມືໃນຂະນະທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດຂອງພຣະອົງຢ່າງໜັກ. ຖ້າເຈົ້າພາດໂອກາດນີ້, ເຈົ້າຈະບໍ່ໄດ້ຮັບໂອກາດອີກຄັ້ງ ບໍ່ວ່າເຈົ້າຈະໃຊ້ຄວາມພະຍາຍາມຫຼາຍສໍ່າໃດກໍຕາມ. ບາງຄົນຮ້ອງໄຫ້ວ່າ: “ພຣະເຈົ້າ, ຂ້ານ້ອຍເຕັມໃຈທີ່ຈະໃສ່ໃຈໃນພາລະຂອງພຣະອົງ ແລະ ຂ້ານ້ອຍເຕັມໃຈທີ່ຈະປະຕິບັດຕາມຄວາມປະສົງຂອງພຣະອົງ”. ແຕ່ເຈົ້າບໍ່ມີເສັ້ນທາງໃນການປະຕິບັດ, ສະນັ້ນ ພາລະຂອງເຈົ້າກໍຈະບໍ່ຍືນຍາວ. ຖ້າເຈົ້າມີເສັ້ນທາງຂ້າງໜ້າ, ເຈົ້າຈະໄດ້ຮັບປະສົບເທື່ອລະບາດກ້າວ ແລະ ປະສົບການຂອງເຈົ້າກໍຈະຖືກກໍ່ສ້າງ ແລະ ຈັດຕັ້ງຂຶ້ນ. ຫຼັງຈາກທີ່ພາລະໜຶ່ງຖືກເຮັດໃຫ້ສຳເລັດແລ້ວ, ອີກພາລະໜຶ່ງກໍຈະຖືກມອບໃຫ້ກັບເຈົ້າ. ເມື່ອປະສົບການຊີວິດຂອງເຈົ້າເລິກເຊິ່ງຂຶ້ນ, ພາລະຂອງເຈົ້າກໍຈະເລິກເຊິ່ງຂຶ້ນເຊັ່ນດຽວກັນ. ບາງຄົນພຽງແຕ່ແບກຮັບພາລະໃນເວລາທີ່ຖືກສຳຜັດໂດຍພຣະວິນຍານບໍລິສຸດເທົ່ານັ້ນ; ຫຼັງຈາກໄລຍະເວລາໃດໜຶ່ງ, ເມື່ອພວກເຂົາບໍ່ມີເສັ້ນທາງໃນການປະຕິບັດ, ພວກເຂົາກໍເຊົາແບກຮັບພາລະນັ້ນເລີຍ. ເຈົ້າບໍ່ສາມາດມີພາລະດ້ວຍການກິນ ແລະ ດື່ມພຣະທຳຂອງພຣະເຈົ້າເທົ່ານັ້ນ. ການເຂົ້າໃຈຄວາມຈິງຫຼາຍຢ່າງ, ເຈົ້າຈະໄດ້ຮັບການຢັ່ງຮູ້, ຮຽນຮູ້ວິທີແກ້ໄຂບັນຫາໂດຍໃຊ້ຄວາມຈິງ ແລະ ໄດ້ຮັບຄວາມເຂົ້າໃຈທີ່ຖືກຕ້ອງຫຼາຍຂຶ້ນກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ຄວາມປະສົງຂອງພຣະເຈົ້າ. ດ້ວຍສິ່ງເຫຼົ່ານີ້, ເຈົ້າຈະມີພາລະ ໃຫ້ແບກຮັບ ແລະ ພຽງເມື່ອນັ້ນເຈົ້າຈຶ່ງຈະສາມາດປະຕິບັດພາລະກິດໄດ້ຢ່າງເໝາະສົມ. ຖ້າເຈົ້າມີພາລະ ແຕ່ບໍ່ມີຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບຄວາມຈິງ, ສິ່ງນັ້ນກໍໃຊ້ການບໍ່ໄດ້ເຊັ່ນກັນ; ເຈົ້າຕ້ອງມີປະສົບການກ່ຽວກັບພຣະທຳຂອງພຣະເຈົ້າດ້ວຍຕົນເອງ ແລະ ຮູ້ຈັກວິທີປະຕິບັດພຣະທຳເຫຼົ່ານັ້ນ. ມີພຽງຫຼັງຈາກທີ່ເຈົ້າເອງໄດ້ເຂົ້າສູ່ຄວາມເປັນຈິງ ເຈົ້າຈຶ່ງຈະສາມາດສະໜອງໃຫ້ກັບຄົນອື່ນ, ນຳພາຄົນອື່ນ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນ.

ໃນໜັງສື “ເສັ້ນທາງ... (4)” ໄດ້ຂຽນໄວ້ວ່າພວກເຈົ້າລ້ວນແລ້ວແຕ່ເປັນຄົນໃນອານາຈັກທີ່

ພຣະເຈົ້າກຳນົດໄວ້ລ່ວງໜ້າກ່ອນຍຸກຕ່າງໆ ແລະ ຄົນໃດກໍຕາມແມ່ນບໍ່ສາມາດເອົາສິ່ງນີ້ໄປຈາກພວກເຈົ້າໄດ້. ມັນຍັງໄດ້ກ່າວອີກວ່າ ພຣະເຈົ້າປາຖະໜາໃຫ້ທຸກຄົນໄດ້ຖືກໃຊ້ ແລະ ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ແລະ ພຣະອົງຮຽກຮ້ອງໃຫ້ພວກເຂົາຢືນໃນຖານະຄົນຂອງພຣະອົງ ແລະ ມີແຕ່ເມື່ອພວກເຂົາກາຍມາເປັນຄົນຂອງພຣະເຈົ້າເທົ່ານັ້ນ ພວກເຂົາຈຶ່ງອາດຈະປະຕິບັດຕາມຄວາມປະສົງຂອງພຣະອົງໄດ້. ພວກເຈົ້າໄດ້ສົນທະນາກັນກ່ຽວກັບບັນຫານີ້ໃນເວລານັ້ນ, ໄດ້ສື່ສານກ່ຽວກັບເສັ້ນທາງຂອງການເຂົ້າສູ່ ໂດຍອີງຕາມບັນທັດຖານສຳລັບຄົນຂອງພຣະເຈົ້າ, ສະນັ້ນ ພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນລະຫວ່າງເວລານັ້ນ ແມ່ນເພື່ອເຮັດໃຫ້ທຸກຄົນອອກຈາກສະພາວະດ້ານລົບຂອງພວກເຂົາ ແລະ ນຳພາພວກເຂົາໄປສູ່ສະພາວະດ້ານບວກ. ໃນຕອນນັ້ນ, ທິດທາງຂອງພາລະກິດຂອງພຣະວິນຍານບໍລິສຸດແມ່ນເພື່ອເຮັດໃຫ້ທຸກຄົນໄດ້ຮັບພຣະທຳຂອງພຣະເຈົ້າໃນຖານະຄົນຂອງພຣະເຈົ້າ ແລະ ເພື່ອເຮັດໃຫ້ພວກເຈົ້າແຕ່ລະຄົນເຂົ້າໃຈຢ່າງຊັດເຈນວ່າ ພວກເຈົ້າເປັນຄົນຂອງພຣະເຈົ້າທີ່ຖືກກຳນົດໄວ້ລ່ວງໜ້າກ່ອນຍຸກຕ່າງໆ ແລະ ຊາຕານບໍ່ສາມາດເອົາພວກເຈົ້າໄດ້. ສະນັ້ນ ພວກເຈົ້າທຸກຄົນຈຶ່ງອະທິຖານວ່າ: "ພຣະເຈົ້າ! ຂ້ານ້ອຍເຕັມໃຈທີ່ຈະເປັນຄົນຂອງພຣະອົງ ເພາະພວກຂ້ານ້ອຍຖືກກຳນົດໄວ້ລ່ວງໜ້າໂດຍພຣະອົງກ່ອນຍຸກຕ່າງໆແລ້ວ ແລະ ຍ້ອນພຣະອົງໄດ້ປະທານສະຖານະນີ້ໃຫ້ກັບພວກຂ້ານ້ອຍ. ພວກຂ້ານ້ອຍເຕັມໃຈທີ່ຈະເຮັດໃຫ້ພຣະອົງພໍໃຈຈາກຕຳແໜ່ງນີ້". ເມື່ອໃດທີ່ເຈົ້າອະທິຖານໃນລັກສະນະນີ້, ພຣະວິນຍານບໍລິສຸດກໍຈະສຳຜັດເຈົ້າ; ນີ້ແມ່ນວິທີທາງທີ່ພຣະວິນຍານບໍລິສຸດມັກປະຕິບັດພາລະກິດ. ໃນໄລຍະເວລານີ້ ເຈົ້າຄວນອະທິຖານ ແລະ ຝຶກຝົນຕົນເອງໃຫ້ສະຫງົບໃຈຂອງເຈົ້າຢູ່ຕໍ່ໜ້າພຣະເຈົ້າ ເພື່ອວ່າເຈົ້າຈະສາມາດພະຍາຍາມເພື່ອຊີວິດ ແລະ ສະແຫວງຫາທາງເຂົ້າສູ່ການຝຶກຝົນແຫ່ງອານາຈັກ. ນີ້ແມ່ນບາດກ້າວທຳອິດ. ໃນຊ່ວງເວລານີ້, ພາລະກິດຂອງພຣະເຈົ້າແມ່ນເພື່ອເຮັດໃຫ້ທຸກຄົນເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ, ມີຊີວິດຝ່າຍວິນຍານທີ່ປົກກະຕິ ແລະ ປະສົບການທີ່ແທ້ຈິງ, ໄດ້ຮັບການດົນໃຈຈາກພຣະວິນຍານບໍລິສຸດ ແລະ ດ້ວຍສິ່ງນີ້ເປັນພື້ນຖານ, ໃຫ້ຮັບເອົາການມອບໝາຍຂອງພຣະເຈົ້າ. ຈຸດປະສົງຂອງການເຂົ້າສູ່ການຝຶກຝົນແຫ່ງອານາຈັກແມ່ນເພື່ອເຮັດໃຫ້ຄຳເວົ້າທຸກຄຳຂອງພວກເຈົ້າ, ການກະທຳທຸກຢ່າງ, ການເຄື່ອນໄຫວທຸກຢ່າງ, ຄວາມຄິດ ແລະແນວຄິດທຸກຢ່າງເຂົ້າສູ່ພຣະທຳຂອງພຣະເຈົ້າ; ເພື່ອໃຫ້ຖືກດົນໃຈໂດຍພຣະເຈົ້າຫຼາຍຂຶ້ນກວ່າເກົ່າ ແລະມີຄວາມຮັກສຳລັບພຣະເຈົ້າ; ແລະ ເພື່ອໃຫ້ພວກເຈົ້າຮັບພາລະໜັກຂຶ້ນສຳລັບຄວາມປະສົງຂອງພຣະເຈົ້າ, ເພື່ອວ່າທຸກຄົນຈະຢູ່ໃນເສັ້ນທາງສູ່ການຖືກພຣະເຈົ້າເຮັດໃຫ້ສົມບູນ ແລະ ທຸກຄົນຈະຢູ່ໃນເສັ້ນທາງທີ່ຖືກຕ້ອງ. ເມື່ອເຈົ້າຢູ່ໃນເສັ້ນທາງສູ່ການຖືກພຣະເຈົ້າເຮັດໃຫ້ສົມບູນ, ແລ້ວເຈົ້າກໍຢູ່ໃນເສັ້ນທາງທີ່ຖືກຕ້ອງ. ເມື່ອຄວາມຄິດ ແລະ ແນວຄິດຂອງເຈົ້າ ພ້ອມທັງເຈດຕະນາທີ່ບໍ່ຖືກຕ້ອງຂອງເຈົ້າ ສາມາດຖືກເຮັດໃຫ້ຖືກຕ້ອງ ແລະ ເຈົ້າສາມາດຫັນຈາກການໃສ່ໃຈໃນເນື້ອໜັງຂອງເຈົ້າມາເປັນການໃສ່ໃຈໃນຄວາມປະສົງຂອງພຣະເຈົ້າ ແລະ ເມື່ອເຈົ້າສາມາດຕໍ່ຕ້ານການລົບກວນຈາກເຈດຕະນາຜິດໆໃນເວລາທີ່ມັນເກີດຂຶ້ນ, ກົງກັນຂ້າມ ປະພຶດຕົນໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ, ຖ້າເຈົ້າສາມາດບັນລຸການປ່ຽນແປງດັ່ງກ່າວ, ແລ້ວເຈົ້າກໍຢູ່ໃນເສັ້ນທາງທີ່ຖືກຕ້ອງຂອງປະສົບການ

ຊີວິດ. ເມື່ອການປະຕິບັດຄຳອະທິຖານຂອງເຈົ້າຢູ່ໃນເສັ້ນທາງທີ່ຖືກຕ້ອງ, ກໍຈະຖືກພຣະວິນຍານບໍລິສຸດດົນໃຈໃນຄຳອະທິຖານຂອງເຈົ້າ. ທຸກຄັ້ງທີ່ເຈົ້າອະທິຖານ, ເຈົ້າຈະຖືກພຣະວິນຍານບໍລິສຸດດົນໃຈໃນຕົວເຈົ້າ; ທຸກຄັ້ງທີ່ເຈົ້າອະທິຖານ, ເຈົ້າຈະສາມາດສະຫງົບຫົວໃຈຂອງເຈົ້າຕໍ່ໜ້າພຣະເຈົ້າ. ທຸກຄັ້ງທີ່ເຈົ້າກິນ ແລະ ດື່ມຂໍ້ພຣະທຳຂອງພຣະເຈົ້າ, ຖ້າເຈົ້າສາມາດເຂົ້າໃຈພາລະກິດທີ່ພຣະອົງກຳລັງປະຕິບັດໃນປັດຈຸບັນ ແລະ ສາມາດຮຽນຮູ້ເຖິງວິທີອະທິຖານ, ວິທີຮ່ວມມື ແລະ ວິທີການເຂົ້າສູ່, ມີພຽງເມື່ອນັ້ນ ການກິນ ແລະ ດື່ມຂອງເຈົ້າໃນພຣະທຳຂອງພຣະເຈົ້າຈຶ່ງຈະບັນລຸຜົນ. ເມື່ອເຈົ້າສາມາດຄົ້ນພົບເສັ້ນທາງເຂົ້າຈາກພຣະທຳຂອງພຣະເຈົ້າ ແລະ ສາມາດເຂົ້າໃຈເຖິງພະລັງໃນປັດຈຸບັນຂອງພາລະກິດຂອງພຣະເຈົ້າ ພ້ອມທັງທິດທາງຂອງພາລະກິດຂອງພຣະວິນຍານບໍລິສຸດ, ເຈົ້າກໍຈະໄດ້ຢູ່ໃນເສັ້ນທາງທີ່ຖືກຕ້ອງ. ຖ້າເຈົ້າບໍ່ເຂົ້າໃຈປະເດັນສຳຄັນເມື່ອເວລາກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ຫຼັງຈາກນັ້ນ ຍັງບໍ່ສາມາດຄົ້ນພົບເສັ້ນທາງໃນການປະຕິບັດ, ນີ້ກໍສະແດງໃຫ້ເຫັນວ່າ ເຈົ້າຍັງບໍ່ເຂົ້າໃຈວິທີກິນ ແລະ ດື່ມພຣະທຳຂອງພຣະອົງຢ່າງຖືກຕ້ອງ ແລະ ເຈົ້າຍັງບໍ່ໄດ້ຄົ້ນພົບວິທີ ຫຼື ຫຼັກການສຳລັບການກິນ ແລະ ດື່ມພຣະທຳຂອງພຣະອົງ. ຖ້າເຈົ້າບໍ່ເຂົ້າໃຈພາລະກິດທີ່ພຣະເຈົ້າປະຕິບັດໃນປັດຈຸບັນ, ເຈົ້າກໍບໍ່ສາມາດຮັບເອົາໜ້າທີ່ໆພຣະອົງຝາກຝັງໃຫ້ກັບເຈົ້າໄດ້. ພາລະກິດທີ່ພຣະເຈົ້າປະຕິບັດໃນປັດຈຸບັນແມ່ນສິ່ງທີ່ມະນຸດຕ້ອງເຂົ້າສູ່ຢ່າງແທ້ຈິງ ແລະ ມີຄວາມເຂົ້າໃຈໃນປັດຈຸບັນ. ພວກເຈົ້າເຂົ້າໃຈກ່ຽວກັບສິ່ງເຫຼົ່ານີ້ບໍ?

ຖ້າເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງມີປະສິດທິພາບ, ຊີວິດຝ່າຍວິນຍານຂອງເຈົ້າກໍຈະກາຍມາເປັນປົກກະຕິ ແລະ ບໍ່ວ່າການທົດລອງປະເພດໃດທີ່ເຈົ້າອາດຈະພະເຊີນ, ສະພາບແວດລ້ອມແບບໃດທີ່ເຈົ້າອາດຈະພະເຊີນ, ຄວາມເຈັບປ່ວຍທາງເນື້ອໜັງທີ່ເຈົ້າອາດທົນທຸກ, ຄວາມແຕກແຍກຂອງອ້າຍເອື້ອຍນ້ອງ ຫຼື ຄວາມຫຍຸ້ງຍາກໃນຄອບຄົວທີ່ເຈົ້າອາດຈະພະເຊີນ, ເຈົ້າສາມາດກິນ ແລະ ດື່ມພຣະທຳຂອງພຣະເຈົ້າປົກກະຕິ, ອະທິຖານປົກກະຕິ ແລະ ດຳເນີນຊີວິດໃນຄຣິສຕະຈັກຂອງເຈົ້າປົກກະຕິ, ຖ້າເຈົ້າສາມາດບັນລຸທຸກສິ່ງນີ້ໄດ້, ມັນກໍຈະສະແດງໃຫ້ເຫັນວ່າ ເຈົ້າຢູ່ໃນເສັ້ນທາງທີ່ຖືກຕ້ອງແລ້ວ. ບາງຄົນອ່ອນແອເກີນໄປ ແລະ ຂາດຄວາມບາກບັ່ນ. ເມື່ອພະເຊີນກັບອຸປະສັກເລັກນ້ອຍພວກເຂົາກໍຈົ່ມພຶມພຳ ແລະ ກາຍເປັນຄົນຄິດລົບ. ການສະແຫວງຫາຄວາມຈິງຈຳເປັນຕ້ອງມີຄວາມບາກບັ່ນ ແລະ ຄວາມຕັ້ງໝັ້ນ. ຖ້າເຈົ້າບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໃນເວລານີ້, ແລ້ວເຈົ້າກໍຕ້ອງສາມາດກຽດຊັງຕົນເອງ ແລະ ເລິກໆ ເຈົ້າຕ້ອງຕັດສິນໃຈຢ່າງງຽບໆວ່າ ເຈົ້າຈະເຮັດໃຫ້ສຳເລັດໃນຄັ້ງຕໍ່ໄປ. ຖ້າໃນເວລານີ້ ເຈົ້າບໍ່ໃສ່ໃຈໃນພາລະຂອງພຣະເຈົ້າ, ແລ້ວເຈົ້າກໍຄວນຕັ້ງໃຈທີ່ຈະກະບົດຕໍ່ເນື້ອໜັງ ໃນເວລາທີ່ພະເຊີນກັບອຸປະສັກແບບດຽວກັນໃນອະນາຄົດ ແລະ ຕັ້ງໝັ້ນໃນການປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ນີ້ແມ່ນວິທີທີ່ເຈົ້າຈະກາຍເປັນຄົນໜ້າສັນລະເສີນ. ບາງຄົນເຖິງກັບບໍ່ຮູ້ເລີຍວ່າ ຄວາມຄິດ ແລະ ແນວຄິດຂອງພວກເຂົາເອງຖືກຕ້ອງ ຫຼື ບໍ່; ຄົນເຫຼົ່ານັ້ນແມ່ນຄົນໂງ່! ຖ້າເຈົ້າຕ້ອງການເອົາຊະນະຫົວໃຈຂອງເຈົ້າ ແລະ ກະບົດຕໍ່ເນື້ອໜັງ, ເຈົ້າຕ້ອງຮູ້ຈັກກ່ອນວ່າ ເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ຫຼື ບໍ່; ມີແຕ່ເມື່ອນັ້ນ ເຈົ້າຈຶ່ງສາມາດເອົາຊະນະຫົວໃຈຂອງເຈົ້າ

ໄດ້. ຖ້າເຈົ້າບໍ່ຮູ້ຈັກວ່າ ເຈດຕະນາຂອງເຈົ້າຖືກຕ້ອງ ຫຼື ບໍ່, ເຈົ້າຈະສາມາດເອົາຊະນະຫົວໃຈຂອງເຈົ້າ ແລະ ກະບົດຕໍ່ເນື້ອໜັງໄດ້ແນວໃດ? ເຖິງແມ່ນວ່າເຈົ້າກະບົດ, ເຈົ້າກໍເຮັດໃນລັກສະນະທີ່ສັບສົນ. ເຈົ້າຄວນຮູ້ວິທີກະບົດຕໍ່ເຈດຕະນາທີ່ບໍ່ຖືກຕ້ອງຂອງເຈົ້າ; ນີ້ຄືຄວາມໝາຍໃນການກະບົດຕໍ່ເນື້ອໜັງ. ເມື່ອເຈົ້າຮູ້ວ່າ ເຈດຕະນາຂອງເຈົ້າ, ຄວາມຄິດ ແລະ ແນວຄິດຂອງເຈົ້າບໍ່ຖືກຕ້ອງ, ເຈົ້າຄວນຟ້າວກັບຄືນ ແລະ ຍ່າງໃນເສັ້ນທາງທີ່ຖືກຕ້ອງ. ແກ້ໄຂບັນຫານີ້ກ່ອນ ແລະ ຝຶກຝົນຕົນເອງເພື່ອບັນລຸທາງເຂົ້າໃນເລື່ອງນີ້, ເພາະເຈົ້າຮູ້ດີທີ່ສຸດວ່າ ເຈົ້າມີເຈດຕະນາທີ່ຖືກຕ້ອງ ຫຼື ບໍ່. ເມື່ອເຈດຕະນາທີ່ບໍ່ຖືກຕ້ອງຖືກເຮັດໃຫ້ຖືກຕ້ອງ ແລະ ເພື່ອເຫັນແກ່ພຣະເຈົ້າໃນຕອນນີ້, ແລ້ວເຈົ້າກໍໄດ້ບັນລຸເປົ້າໝາຍແຫ່ງການເອົາຊະນະຫົວໃຈຂອງເຈົ້າແລ້ວ.

ສິ່ງສຳຄັນທີ່ສຸດສຳລັບພວກເຈົ້າທີ່ຈະເຮັດໃນຕອນນີ້ຄືການໄດ້ຮັບຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ພາລະກິດຂອງພຣະອົງ. ເຈົ້າຕ້ອງຮູ້ຈັກວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດໃນມະນຸດ; ການກະທຳເຫຼົ່ານີ້ແມ່ນຈຳເປັນສຳລັບການເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ມັນຈະງ່າຍສຳລັບເຈົ້າທີ່ຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ ຫຼັງຈາກທີ່ເຈົ້າເຂົ້າໃຈຈຸດສຳຄັນນີ້. ເຈົ້າເຊື່ອໃນພຣະເຈົ້າ ແລະ ຮູ້ຈັກພຣະເຈົ້າ ເຊິ່ງສະແດງໃຫ້ເຫັນວ່າ ຄວາມເຊື່ອຂອງເຈົ້າໃນພຣະເຈົ້າແມ່ນແທ້ຈິງ. ຖ້າເຈົ້າສືບຕໍ່ໄດ້ຮັບປະສົບການ, ແຕ່ສຸດທ້າຍ ຍັງບໍ່ສາມາດຮູ້ຈັກພຣະເຈົ້າ, ແລ້ວເຈົ້າກໍເປັນຄົນທີ່ຕໍ່ຕ້ານພຣະເຈົ້າຢ່າງແນ່ນອນ. ຄົນທີ່ພຽງແຕ່ເຊື່ອໃນພຣະເຢຊູຄຣິດ ແຕ່ບໍ່ເຊື່ອໃນພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນແມ່ນລ້ວນແລ້ວແຕ່ຖືກປະນາມທັງໝົດ. ພວກເຂົາເປັນພວກຟາຣີຊາຍສະໄໝໃໝ່ ເພາະພວກເຂົາບໍ່ຮັບຮູ້ພຣະເຈົ້າແຫ່ງປັດຈຸບັນ; ພວກເຂົາທຸກຄົນຢູ່ຝ່າຍກົງກັນຂ້າມກັບພຣະເຈົ້າ. ບໍ່ວ່າພວກເຂົາອາດຈະອຸທິດຄວາມບູຊາແນວໃດກໍຕາມໃນພຣະເຢຊູ, ມັນກໍຈະສູນເປົ່າທັງໝົດ; ພຣະເຈົ້າຈະບໍ່ສັນລະເສີນເຈົ້າ. ທຸກຄົນທີ່ມີແຜ່ນປ້າຍໂຄສະນາອ້າງວ່າ ພວກເຂົາເຊື່ອໃນພຣະເຈົ້າ ແຕ່ບໍ່ມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າໃນຫົວໃຈຂອງພວກເຂົາ ແມ່ນເປັນພວກໜ້າຊື່ໃຈຄົດ!

ເພື່ອສະແຫວງຫາໃຫ້ພຣະເຈົ້າເຮັດໃຫ້ສົມບູນ, ເຈົ້າຕ້ອງເຂົ້າໃຈກ່ອນວ່າ ການຖືກພຣະອົງເຮັດໃຫ້ສົມບູນໝາຍເຖິງຫຍັງ ພ້ອມທັງເງື່ອນໄຂຫຍັງແດ່ທີ່ເຈົ້າຕ້ອງປະກອບມີເພື່ອທີ່ຈະຖືກເຮັດໃຫ້ສົມບູນ. ເມື່ອເຈົ້າໄດ້ເຂົ້າໃຈເລື່ອງດັ່ງກ່າວ, ແລ້ວເຈົ້າກໍຕ້ອງຄົ້ນຫາເສັ້ນທາງໃນການປະຕິບັດ. ເຈົ້າຕ້ອງປະກອບມີຄວາມສາມາດໃດໜຶ່ງເພື່ອຖືກເຮັດໃຫ້ສົມບູນ. ຫຼາຍຄົນບໍ່ມີຄຸນນະພາບສູງຢ່າງພຽງພໍມາແຕ່ກຳເນີດ, ເຊິ່ງໃນກໍລະນີນີ້ເຈົ້າຕ້ອງຈ່າຍລາຄາ ແລະ ໃຊ້ຄວາມພະຍາຍາມສ່ວນຕົວຂອງເຈົ້າໜັກຂຶ້ນ. ຍິ່ງຄຸນນະພາບຂອງເຈົ້າຕໍ່າສໍ່າໃດ, ເຈົ້າຍິ່ງຕ້ອງໃຊ້ຄວາມພະຍາຍາມສ່ວນຕົວຫຼາຍຂຶ້ນ. ຍິ່ງຄວາມເຂົ້າໃຈຂອງເຈົ້າກ່ຽວກັບພຣະທຳຂອງພຣະເຈົ້າຍິ່ງໃຫຍ່ຫຼາຍສໍ່າໃດ ແລະ ຍິ່ງເຈົ້ານຳໃຊ້ພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດຫຼາຍສໍ່າໃດ, ເຈົ້າກໍຍິ່ງສາມາດເຂົ້າສູ່ເສັ້ນທາງສູ່ການຖືກພຣະເຈົ້າເຮັດໃຫ້ສົມບູນໄດ້ໄວຍິ່ງຂຶ້ນສໍ່ານັ້ນ. ຜ່ານການອະທິຖານ, ເຈົ້າສາມາດຖືກເຮັດໃຫ້ສົມບູນໃນຂອບເຂດການອະທິຖານ; ເຈົ້າຍັງສາມາດຖືກເຮັດໃຫ້ສົມບູນຜ່ານການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຜ່ານການເຂົ້າໃຈແກ່ນແທ້ຂອງພຣະທຳ ແລະ ການດຳລົງຊີວິດຕາມຄວາມເປັນຈິງຂອງພຣະທຳ. ຜ່ານການພະເຊີນກັບ

ພຣະທຳຂອງພຣະເຈົ້າໃນປະຈຳວັນ, ເຈົ້າຄວນມາຮູ້ຈັກສິ່ງທີ່ຂາດເຂີນໃນຕົວເຈົ້າເອງ; ຍິ່ງໄປກວ່ານັ້ນ ເຈົ້າຄວນຮູ້ຈັກຂໍ້ບົກຜ່ອງທີ່ເປັນອັນຕະລາຍ ແລະ ຈຸດອ່ອນຂອງເຈົ້າ ແລະ ອະທິຖານ ແລະ ອ້ອນວອນເຖິງພຣະເຈົ້າ. ການເຮັດແບບນີ້ ເຈົ້າຈະຖືກເຮັດໃຫ້ສົມບູນເທື່ອລະໜ້ອຍ. ເສັ້ນທາງສູ່ການຖືກເຮັດໃຫ້ສົມບູນຄື: ການອະທິຖານ, ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ການເຂົ້າໃຈເຖິງແກ່ນແທ້ແຫ່ງພຣະທຳຂອງພຣະເຈົ້າ, ການເຂົ້າສູ່ປະສົບການຂອງພຣະທຳຂອງພຣະເຈົ້າ, ການຮຽນຮູ້ຈັກສິ່ງທີ່ຂາດເຂີນໃນຕົວເຈົ້າ, ການເຊື່ອຟັງພາລະກິດຂອງພຣະເຈົ້າ, ການໃສ່ໃຈໃນພາລະຂອງພຣະເຈົ້າ ແລະ ປະຖິ້ມເນື້ອໜັງຜ່ານຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າ ແລະ ການເຂົ້າຮ່ວມສົນທະນາເລື້ອຍໆກັບອ້າຍເອື້ອຍນ້ອງຂອງເຈົ້າ ເຊິ່ງຈະເຮັດໃຫ້ປະສົບການຂອງເຈົ້າເພີ່ມພູນຂຶ້ນ. ບໍ່ວ່າຈະເປັນຊີວິດສ່ວນລວມ ຫຼື ຊີວິດສ່ວນຕົວຂອງເຈົ້າ ແລະ ບໍ່ວ່າຈະເປັນການຊຸມນຸມທີ່ໃຫຍ່ ຫຼື ການຊຸມນຸມທີ່ນ້ອຍ, ທຸກສິ່ງສາມາດເຮັດໃຫ້ເຈົ້າໄດ້ຮັບປະສົບການ ແລະ ໄດ້ຮັບການຝຶກຝົນ ເພື່ອວ່າຫົວໃຈຂອງເຈົ້າຈະສາມາດສະຫງົບຕໍ່ໜ້າພຣະເຈົ້າ ແລະ ກັບຄືນຫາພຣະເຈົ້າ. ທຸກສິ່ງເຫຼົ່ານີ້ແມ່ນຂະບວນການຂອງການຖືກເຮັດໃຫ້ສົມບູນ. ການມີປະສົບການກັບພຣະທຳຂອງພຣະເຈົ້າທີ່ກ່າວເຖິງ ແມ່ນໝາຍເຖິງການທີ່ສາມາດຊີມລົດຊາດແຫ່ງພຣະທຳຂອງພຣະເຈົ້າຢ່າງແທ້ຈິງ ແລະ ເຮັດໃຫ້ເຈົ້າເອງດຳລົງຊີວິດຕາມພຣະທຳເຫຼົ່ານັ້ນ ເພື່ອເຈົ້າຈະມີຄວາມເຊື່ອ ແລະ ຄວາມຮັກທີ່ຍິ່ງໃຫຍ່ຂຶ້ນສຳລັບພຣະເຈົ້າ. ໃນວິທີນີ້, ເຈົ້າຈະປົດອຸປະນິໄສອັນຊົ່ວຊ້າ ແລະ ເສື່ອມຊາມຂອງເຈົ້າອອກເທື່ອລະໜ້ອຍ; ເຈົ້າຈະຖອນແຮງຈູງໃຈທີ່ບໍ່ເໝາະສົມອອກຈາກຕົນເອງເທື່ອລະໜ້ອຍ ແລະ ດຳລົງຊີວິດຕາມລັກສະນະຂອງຄົນປົກກະຕິ. ຍິ່ງຄວາມຮັກສຳລັບພຣະເຈົ້າທີ່ຢູ່ຂ້າງໃນເຈົ້າຍິ່ງໃຫຍ່ສ່ຳໃດ ເຊິ່ງເວົ້າໄດ້ວ່າ ຍິ່ງເຈົ້າຖືກພຣະເຈົ້າເຮັດໃຫ້ສົມບູນຫຼາຍສ່ຳໃດ, ເຈົ້າຍິ່ງຖືກຊາຕານເຮັດໃຫ້ເສື່ອມຊາມໜ້ອຍລົງສ່ຳນັ້ນ. ຜ່ານປະສົບການຕົວຈິງຂອງເຈົ້າ, ເຈົ້າຈະເຂົ້າສູ່ເສັ້ນທາງແຫ່ງການຖືກເຮັດໃຫ້ສົມບູນເທື່ອລະໜ້ອຍ. ສະນັ້ນ, ຖ້າເຈົ້າປາຖະໜາທີ່ຈະຖືກເຮັດໃຫ້ສົມບູນ, ການໃສ່ໃຈໃນຄວາມປະສົງຂອງພຣະເຈົ້າ ແລະ ການມີປະສົບການກັບພຣະທຳຂອງພຣະເຈົ້າແມ່ນສຳຄັນເປັນພິເສດ.

# ພຣະເຈົ້າເຮັດໃຫ້ຜູ້ທີ່ຕາມໃຈພຣະອົງເອງສົມບູນ

ປັດຈຸບັນນີ້, ພຣະເຈົ້າຕ້ອງການໄດ້ຮັບຄົນກຸ່ມໃດໜຶ່ງ, ກຸ່ມທີ່ປະກອບມີຄົນທີ່ພະຍາຍາມຮ່ວມມືກັບພຣະອົງ, ຄົນທີ່ສາມາດເຊື່ອຟັງພາລະກິດຂອງພຣະອົງ, ຄົນທີ່ເຊື່ອພຣະທຳທີ່ພຣະເຈົ້າກ່າວນັ້ນເປັນຄວາມຈິງ ແລະ ຄົນທີ່ສາມາດນຳເງື່ອນໄຂຂອງພຣະເຈົ້າເຂົ້າສູ່ການປະຕິບັດ; ພວກເຂົາແມ່ນຄົນທີ່ມີຄວາມເຂົ້າໃຈຢ່າງແທ້ຈິງຢູ່ໃນຫົວໃຈຂອງພວກເຂົາ, ພວກເຂົາແມ່ນຄົນທີ່ສາມາດຖືກເຮັດໃຫ້ສົມບູນແບບ ແລະ ພວກເຂົາຈະສາມາດເດີນຕາມເສັ້ນທາງແຫ່ງຄວາມສົມບູນແບບຢ່າງຫຼີກເວັ້ນບໍ່ໄດ້. ຄົນທີ່ບໍ່ສາມາດຖືກເຮັດໃຫ້ສົມບູນແມ່ນຄົນທີ່ປາສະຈາກຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບພາລະກິດຂອງພຣະເຈົ້າ, ຄົນທີ່ບໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຄົນທີ່ບໍ່ໃສ່ໃຈຕໍ່ພຣະທຳຂອງພຣະອົງ ແລະ ຄົນທີ່ບໍ່ມີຄວາມຮັກໃດໆຕໍ່ພຣະເຈົ້າຢູ່ໃນຫົວໃຈຂອງພວກເຂົາ. ຄົນທີ່ສົງໄສໃນພຣະເຈົ້າທີ່ບັງເກີດເປັນມະນຸດ ແມ່ນບໍ່ແນ່ໃຈກ່ຽວກັບພຣະອົງ, ບໍ່ເຄີຍປະຕິບັດຕໍ່ພຣະທຳຂອງພຣະອົງຢ່າງຈິງຈັງຈັກເທື່ອ ແລະ ຫຼອກລວງພຣະອົງຢູ່ສະເໝີ ແມ່ນຄົນທີ່ຕໍ່ຕ້ານພຣະເຈົ້າ ແລະ ເປັນຂອງຊາຕານ; ບໍ່ມີທາງທີ່ຈະເຮັດໃຫ້ຄົນດັ່ງກ່າວສົມບູນແບບໄດ້.

ຖ້າເຈົ້າປາຖະໜາທີ່ຈະຖືກເຮັດໃຫ້ສົມບູນແບບ, ແລ້ວກ່ອນອື່ນ ເຈົ້າຕ້ອງເປັນທີ່ໂປດປານຂອງພຣະເຈົ້າ ຍ້ອນວ່າ ພຣະເຈົ້າເຮັດໃຫ້ຄົນທີ່ພຣະອົງໂປດປານ ແລະ ຜູ້ທີ່ພຣະອົງພໍໃຈເອງສົມບູນແບບ. ຖ້າເຈົ້າປາຖະໜາທີ່ເປັນທີ່ພໍໃຈຂອງພຣະເຈົ້າເອງ, ແລ້ວເຈົ້າຕ້ອງມີຫົວໃຈທີ່ເຊື່ອຟັງພາລະກິດຂອງພຣະອົງ, ເຈົ້າຕ້ອງພະຍາຍາມສະແຫວງຫາຄວາມຈິງ ແລະ ເຈົ້າຕ້ອງຍອມຮັບການກວດສອບຂອງພຣະເຈົ້າໃນທຸກສິ່ງ. ທຸກສິ່ງທີ່ເຈົ້າເຮັດໄດ້ຜ່ານການກວດສອບຂອງພຣະເຈົ້າແລ້ວບໍ? ເຈດຕະນາຂອງເຈົ້າຖືກຕ້ອງບໍ? ຖ້າເຈດຕະນາຂອງເຈົ້າຖືກຕ້ອງ, ແລ້ວພຣະເຈົ້າຈະຊົມເຊີຍເຈົ້າ; ຖ້າເຈດຕະນາຂອງເຈົ້ານັ້ນຜິດ, ສິ່ງນີ້ສະແດງໃຫ້ເຫັນວ່າ ສິ່ງທີ່ຫົວໃຈຂອງເຈົ້າຮັກບໍ່ແມ່ນພຣະເຈົ້າ, ແຕ່ຮັກເນື້ອໜັງ ແລະ ຊາຕານ. ສະນັ້ນ, ເຈົ້າຕ້ອງໃຊ້ການອະທິຖານເປັນວິທີຍອມຮັບການກວດສອບຂອງພຣະເຈົ້າໃນທຸກສິ່ງ. ເມື່ອເຈົ້າອະທິຖານ, ເຖິງແມ່ນວ່າເຮົາບໍ່ໄດ້ຢືນຢູ່ຕໍ່ໜ້າເຈົ້າດ້ວຍຕົນເອງ, ພຣະວິນຍານບໍລິສຸດກໍຈະຢູ່ກັບເຈົ້າ ແລະ ມັນແມ່ນທັງເຮົາເອງ ແລະ ພຣະວິນຍານຂອງພຣະເຈົ້າທີ່ເຈົ້າອະທິຖານຫາ. ເປັນຫຍັງເຈົ້າຈຶ່ງເຊື່ອໃນເນື້ອໜັງນີ້? ເຈົ້າເຊື່ອກໍຍ້ອນວ່າພຣະອົງມີພຣະວິນຍານຂອງພຣະເຈົ້າ. ເຈົ້າຈະເຊື່ອໃນຄົນນີ້ບໍ ຖ້າພຣະອົງປາສະຈາກພຣະວິນຍານຂອງພຣະເຈົ້າ? ເມື່ອເຈົ້າເຊື່ອໃນບຸກຄົນນີ້, ເຈົ້າເຊື່ອໃນພຣະວິນຍານຂອງພຣະເຈົ້າ. ເມື່ອເຈົ້າຢຳເກງບຸກຄົນນີ້, ເຈົ້າຢຳເກງພຣະວິນຍານຂອງພຣະເຈົ້າ. ຄວາມເຊື່ອໃນພຣະວິນຍານຂອງພຣະເຈົ້າແມ່ນຄວາມເຊື່ອໃນບຸກຄົນນີ້ ແລະ ຄວາມເຊື່ອໃນບຸກຄົນນີ້ກໍ່ແມ່ນຄວາມເຊື່ອໃນພຣະວິນຍານຂອງພຣະເຈົ້າເຊັ່ນກັນ. ເມື່ອເຈົ້າອະທິຖານ, ເຈົ້າຮູ້ສຶກໄດ້ວ່າພຣະວິນຍານຂອງພຣະເຈົ້າຢູ່ກັບເຈົ້າ ແລະ ພຣະເຈົ້າຢູ່ຕໍ່ໜ້າເຈົ້າ ແລະ ສະນັ້ນ ເຈົ້າຈຶ່ງອະທິຖານຫາພຣະວິນຍານຂອງພຣະອົງ. ມື້ນີ້, ຜູ້ຄົນສ່ວນຫຼາຍຢ້ານຫຼາຍເກີນໄປທີ່ຈະນຳເອົາການກະທຳຂອງພວກເຂົາມາຢູ່ຕໍ່ໜ້າພຣະເຈົ້າ; ໃນຂະນະທີ່ເຈົ້າອາດຈະຫຼອກລວງເນື້ອໜັງຂອງພຣະອົງ, ເຈົ້າບໍ່ສາມາດຫຼອກລວງ

ພຣະວິນຍານຂອງພຣະອົງໄດ້. ເລື່ອງໃດກໍ່ຕາມທີ່ບໍ່ສາມາດທົນຕໍ່ການກວດສອບຂອງພຣະເຈົ້າໄດ້ ກໍບໍ່ສອດຄ່ອງກັບຄວາມຈິງ ແລະ ຄວນຖືກໂຍນຖິ້ມ; ບໍ່ດັ່ງນັ້ນມັນກໍຈະເປັນບາບຕໍ່ພຣະເຈົ້າ. ດັ່ງນັ້ນ, ເຈົ້າຕ້ອງວາງຫົວໃຈຂອງເຈົ້າໄວ້ຕໍ່ໜ້າພຣະເຈົ້າຢູ່ຕະຫຼອດເວລາ ເມື່ອເຈົ້າອະທິຖານ, ເມື່ອເຈົ້າເວົ້າ ແລະ ສົນທະນາກັບບັນດາອ້າຍເອື້ອຍນ້ອງຂອງເຈົ້າ ແລະ ເມື່ອເຈົ້າປະຕິບັດໜ້າທີ່ຂອງເຈົ້າ ແລະ ຈັດການທຸລະກິດຂອງເຈົ້າ. ເມື່ອເຈົ້າປະຕິບັດໜ້າທີ່ຂອງເຈົ້າ, ພຣະເຈົ້າຈະສະຖິດຢູ່ກັບເຈົ້າ ແລະ ຕາບໃດທີ່ເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ແລະ ສຳລັບພາລະກິດໃນເຮືອນຂອງພຣະເຈົ້າ, ພຣະອົງຈະຍອມຮັບທຸກສິ່ງທີ່ເຈົ້າເຮັດ; ເຈົ້າຄວນອຸທິດຕົນເອງຢ່າງຈິງຈັງເພື່ອປະຕິບັດໜ້າທີ່ຂອງເຈົ້າໃຫ້ສຳເລັດ. ເມື່ອເຈົ້າອະທິຖານ, ຖ້າເຈົ້າມີຄວາມຮັກຢູ່ໃນໃຈຂອງເຈົ້າຕໍ່ພຣະເຈົ້າ ແລະ ສະແຫວງຫາການເບິ່ງແຍງ, ການປົກປ້ອງ ແລະ ການກວດສອບ, ຖ້າສິ່ງເຫຼົ່ານີ້ແມ່ນເຈດຕະນາຂອງເຈົ້າ, ຄຳອະທິຖານຕ່າງໆຂອງເຈົ້າກໍຈະມີປະສິດຕິພາບ. ຕົວຢ່າງເຊັ່ນ ເມື່ອເຈົ້າອະທິຖານໃນທີ່ປະຊຸມ, ຖ້າເຈົ້າເປີດໃຈຂອງເຈົ້າ ແລະ ອະທິຖານຫາພຣະເຈົ້າ ແລະ ບອກກັບພຣະອົງສິ່ງທີ່ຢູ່ໃນໃຈຂອງເຈົ້າໂດຍບໍ່ມີການເວົ້າຕົວະ ແລ້ວຄຳອະທິຖານຕ່າງໆຂອງເຈົ້າກໍຈະມີປະສິດຕິພາບຢ່າງແນ່ນອນ. ຖ້າເຈົ້າຮັກພຣະເຈົ້າຢ່າງຈິງຈັງຢູ່ໃນຫົວໃຈເຈົ້າ, ແລ້ວເຈົ້າກໍຄວນສາບານກັບພຣະເຈົ້າວ່າ: "ພຣະເຈົ້າ, ຜູ້ຢູ່ໃນສະຫວັນ ແລະ ເທິງແຜ່ນດິນ ແລະ ທ່າມກາງທຸກສິ່ງ, ຂ້ານ້ອຍຂໍສາບານຕໍ່ພຣະອົງວ່າ: ຂໍໃຫ້ພຣະວິນຍານຂອງພຣະອົງກວດສອບທຸກສິ່ງທີ່ຂ້ານ້ອຍເຮັດ ແລະ ປົກປ້ອງ ແລະ ເບິ່ງແຍງຂ້ານ້ອຍຕະຫຼອດເວລາ ແລະ ເຮັດໃຫ້ທຸກສິ່ງທີ່ຂ້ານ້ອຍເຮັດເປັນໄປຕາມຄວາມປະສົງເພື່ອຢືນຢູ່ຕໍ່ໜ້າພຣະອົງ. ຫາກຫົວໃຈຂອງຂ້ານ້ອຍຢຸດຮັກພຣະອົງ ຫຼື ມັນທໍລະຍົດຕໍ່ພຣະອົງ, ຂໍໃຫ້ພຣະອົງຂ້ຽນຕີ ແລະ ສາບແຊ່ງຂ້ານ້ອຍຢ່າງສາຫັດດ້ວຍ. ຢ່າຍົກໂທດໃຫ້ຂ້ານ້ອຍບໍ່ວ່າໃນໂລກນີ້ ຫຼື ໂລກໜ້າ!" ເຈົ້າກ້າສາບານແບບນັ້ນບໍ? ຖ້າເຈົ້າບໍ່ກ້າ, ນັ້ນກໍສະແດງວ່າ ເຈົ້າເປັນຄົນຂີ້ຢ້ານ ແລະ ເຈົ້າຍັງຮັກຕົວເຈົ້າເອງຢູ່. ພວກເຈົ້າມີວິທີການແກ້ໄຂບັນຫານີ້ບໍ? ຖ້ານີ້ແມ່ນວິທີການແກ້ໄຂບັນຫາຂອງເຈົ້າແທ້ໆ, ເຈົ້າຄວນສາບານແບບນີ້. ຖ້າເຈົ້າມີຄວາມຕັ້ງໃຈທີ່ຈະສາບານແບບນັ້ນ, ແລ້ວພຣະເຈົ້າຈະເຮັດໃຫ້ຄວາມຕັ້ງໃຈຂອງເຈົ້າສຳເລັດ. ເມື່ອເຈົ້າສາບານກັບພຣະເຈົ້າ, ພຣະອົງກໍຟັງ. ພຣະເຈົ້າກຳນົດວ່າເຈົ້າເປັນຄົນບາບ ຫຼື ເປັນຄົນຊອບທຳໂດຍການວັດແທກແຫ່ງຄຳອະທິຖານຂອງເຈົ້າ ແລະ ການປະຕິບັດຂອງເຈົ້າ. ປັດຈຸບັນນີ້, ນີ້ແມ່ນຂະບວນການຂອງການເຮັດໃຫ້ພວກເຈົ້າສົມບູນແບບ ແລະ ຖ້າເຈົ້າມີຄວາມເຊື່ອທີ່ແທ້ຈິງໃນການຖືກເຮັດໃຫ້ສົມບູນ, ແລ້ວເຈົ້າກໍຈະນຳເອົາທຸກສິ່ງທີ່ເຈົ້າເຮັດມາໄວ້ຕໍ່ໜ້າພຣະເຈົ້າ ແລະ ຍອມຮັບເອົາການກວດສອບຂອງພຣະອົງ; ຖ້າເຈົ້າເຮັດບາງສິ່ງບາງຢ່າງທີ່ເປັນກະບົດຢ່າງຮ້າຍແຮງ ຫຼື ຖ້າເຈົ້າທໍລະຍົດພຣະເຈົ້າ, ແລ້ວພຣະອົງກໍຈະເຮັດໃຫ້ຄຳສາບານຂອງເຈົ້າເປັນຈິງ ແລະ ສະນັ້ນ ບໍ່ວ່າແມ່ນຫຍັງຈະເກີດຂຶ້ນກັບເຈົ້າກໍຕາມ, ບໍ່ວ່າມັນຈະເປັນການລົງໂທດສູ່ອະເວຈີ ຫຼື ການຂ້ຽນຕີ, ນີ້ກໍເປັນການກະທຳຂອງເຈົ້າເອງ. ເຈົ້າໃຫ້ຄຳສາບານແລ້ວ, ດັ່ງນັ້ນ, ເຈົ້າກໍຄວນປະຕິບັດຕາມຄຳສາບານນັ້ນ. ຖ້າເຈົ້າໃຫ້ຄຳສາບານ, ແຕ່ບໍ່ປະຕິບັດຕາມຄຳສາບານນັ້ນ, ເຈົ້າກໍຈະພົບກັບການລົງໂທດສູ່ອະເວຈີ. ຍ້ອນຄຳສາບານເປັນຂອງເຈົ້າ, ພຣະເຈົ້າກໍຈະເຮັດໃຫ້ຄຳສາບານຂອງເຈົ້ານັ້ນບັນລຸຜົນ. ບາງຄົນຢ້ານ

ຫຼັງຈາກທີ່ພວກເຂົາອະທິຖານ ແລະ ອາໄລອາວອນວ່າ, "ທຸກຢ່າງຜ່ານໄປແລ້ວ! ໂອກາດຂອງຂ້ານ້ອຍໃນການມຶນເມົາໄດ້ຫາຍໄປແລ້ວ; ໂອກາດຂອງຂ້ານ້ອຍໃນການເຮັດສິ່ງຊົ່ວຮ້າຍໄດ້ຫາຍໄປແລ້ວ; ໂອກາດຂອງຂ້ານ້ອຍທີ່ຈະໝົກມຸ້ນກັບຄວາມປາຖະໜາທາງໂລກຂອງຂ້ານ້ອຍໄດ້ຫາຍໄປແລ້ວ!" ຜູ້ຄົນເຫຼົ່ານີ້ຍັງຄົງຮັກໂລກ ແລະ ຄວາມບາບຢູ່ ແລະ ພວກເຂົາຈະພົບກັບຄວາມຫາຍະນະແນ່ນອນ.

ການເປັນຜູ້ຄົນທີ່ເຊື່ອໃນພຣະເຈົ້າ ໝາຍຄວາມວ່າທຸກສິ່ງທີ່ເຈົ້າເຮັດຕ້ອງຖືກນຳມາວາງໄວ້ຕໍ່ໜ້າພຣະອົງ ແລະ ເຮັດໃຫ້ຢູ່ໃນການກວດສອບຂອງພຣະອົງ. ຖ້າສິ່ງທີ່ເຈົ້າເຮັດສາມາດນຳມາໄວ້ຕໍ່ໜ້າພຣະວິນຍານຂອງພຣະເຈົ້າ ແຕ່ບໍ່ແມ່ນຕໍ່ໜ້າເນື້ອໜັງຂອງພຣະເຈົ້າແລ້ວ, ນີ້ກໍສະແດງໃຫ້ເຫັນວ່າເຈົ້າບໍ່ໄດ້ມາຢູ່ໃນການກວດສອບຂອງພຣະວິນຍານຂອງພຣະອົງ. ພຣະວິນຍານຂອງພຣະເຈົ້າແມ່ນໃຜ? ໃຜແມ່ນບຸກຄົນທີ່ພຣະເຈົ້າເປັນພະຍານໃຫ້? ພຣະອົງບໍ່ແມ່ນອັນໜຶ່ງ ແລະ ອັນດຽວກັນບໍ? ຄົນສ່ວນໃຫຍ່ເຫັນພຣະອົງເປັນສອງສິ່ງທີ່ແຍກອອກຈາກກັນ, ໂດຍເຊື່ອວ່າ ພຣະວິນຍານຂອງພຣະເຈົ້າແມ່ນພຣະວິນຍານຂອງພຣະເຈົ້າ ແລະ ຜູ້ທີ່ພຣະເຈົ້າເປັນພະຍານໃຫ້ກໍພຽງແຕ່ເປັນມະນຸດ. ແຕ່ເຈົ້າບໍ່ໄດ້ເຂົ້າໃຈຜິດບໍ? ບຸກຄົນນີ້ປະຕິບັດພາລະກິດແທນຜູ້ໃດ? ບັນດາຜູ້ທີ່ບໍ່ຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ມີຄວາມເຂົ້າໃຈຝ່າຍຈິດວິນຍານ. ພຣະວິນຍານຂອງພຣະເຈົ້າ ແລະ ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງແມ່ນໜຶ່ງດຽວກັນ, ຍ້ອນວ່າພຣະວິນຍານຂອງພຣະເຈົ້າໄດ້ປາກົດຕົວໃນເນື້ອໜັງ. ຖ້າບຸກຄົນນີ້ບໍ່ເມດຕາຕໍ່ເຈົ້າ, ແລ້ວພຣະວິນຍານຂອງພຣະເຈົ້າຈະເມດຕາບໍ? ເຈົ້າບໍ່ສັບສົນບໍ? ໃນປັດຈຸບັນ, ທຸກຄົນທີ່ບໍ່ສາມາດຍອມຮັບການກວດສອບຂອງພຣະເຈົ້າກໍບໍ່ສາມາດໄດ້ຮັບການອະນຸມັດຈາກພຣະອົງ ແລະ ຜູ້ທີ່ບໍ່ຮູ້ຈັກພຣະເຈົ້າຜູ້ບັງເກີດເປັນມະນຸດກໍບໍ່ສາມາດຖືກເຮັດໃຫ້ສົມບູນແບບໄດ້. ຈົ່ງເບິ່ງທຸກສິ່ງທີ່ເຈົ້າເຮັດ ແລະ ເບິ່ງວ່າມັນສາມາດເອົາມາວາງໄວ້ຕໍ່ໜ້າພຣະເຈົ້າໄດ້ ຫຼື ບໍ່. ຖ້າເຈົ້າບໍ່ສາມາດນຳເອົາທຸກສິ່ງທີ່ເຈົ້າເຮັດນັ້ນມາວາງໄວ້ຕໍ່ໜ້າພຣະເຈົ້າແລ້ວ, ສິ່ງນີ້ສະແດງໃຫ້ເຫັນວ່າເຈົ້າເປັນຄົນຊົ່ວຮ້າຍ. ຄົນຊົ່ວຮ້າຍສາມາດຖືກເຮັດໃຫ້ສົມບູນແບບໄດ້ບໍ? ທັງໝົດທີ່ເຈົ້າເຮັດ, ທຸກໆການກະທຳ, ທຸກເຈດຕະນາ ແລະ ທຸກປະຕິກິລະຍາຄວນຖືກນຳມາວາງໄວ້ຕໍ່ໜ້າພຣະເຈົ້າ. ແມ່ນແຕ່ຊີວິດຝ່າຍວິນຍານປະຈຳວັນຂອງເຈົ້າ ນັ້ນກໍຄື ຄຳອະທິຖານຂອງເຈົ້າ, ຄວາມໃກ້ຊິດຂອງເຈົ້າກັບພຣະເຈົ້າ, ວິທີທີ່ເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ການສົນທະນາຂອງເຈົ້າກັບອ້າຍເອື້ອຍນ້ອງຂອງເຈົ້າ ແລະ ຊີວິດຂອງເຈົ້າພາຍໃນຄຣິສຕະຈັກ ແລະ ການຮັບໃຊ້ຂອງເຈົ້າຢ່າງຮ່ວມມືກັນແມ່ນສາມາດນຳມາວາງໄວ້ຕໍ່ໜ້າພຣະເຈົ້າໃຫ້ຖືກກວດສອບໂດຍພຣະອົງ. ມັນຄືການປະຕິບັດດັ່ງກ່າວທີ່ຈະຊ່ວຍໃຫ້ເຈົ້າບັນລຸການເຕີບໂຕຂຶ້ນໃນຊີວິດ. ຂະບວນການຍອມຮັບການກວດສອບຂອງພຣະເຈົ້າແມ່ນຂະບວນການຂອງການເຮັດໃຫ້ບໍລິສຸດ. ຍິ່ງເຈົ້າສາມາດຍອມຮັບການກວດສອບຂອງພຣະເຈົ້າຫຼາຍເທົ່າໃດ, ເຈົ້າກໍຍິ່ງຖືກເຮັດໃຫ້ບໍລິສຸດຫຼາຍສໍ່ານັ້ນ ແລະ ເຈົ້າກໍຍິ່ງສອດຄ່ອງກັບຄວາມປະສົງຂອງພຣະເຈົ້າຫຼາຍສໍ່າເທົ່ານັ້ນ, ເພື່ອວ່າເຈົ້າຈະບໍ່ຖືກດຶງເຂົ້າສູ່ຄວາມເສື່ອມຊາມ ແລະ ຫົວໃຈຂອງເຈົ້າກໍຈະດຳລົງຢູ່ຕໍ່ໜ້າຂອງພຣະອົງ. ຍິ່ງເຈົ້າຍອມຮັບການກວດສອບຂອງພຣະອົງຫຼາຍເທົ່າໃດ, ຄວາມອັບອາຍຂອງຊາຕານ ແລະ ຄວາມສາມາດຂອງເຈົ້າທີ່ຈະປະຖິ້ມເນື້ອໜັງກໍຍິ່ງຫຼາຍສໍ່ານັ້ນ. ດັ່ງນັ້ນ, ການຍອມຮັບ

ການກວດສອບຂອງພຣະເຈົ້າແມ່ນເສັ້ນທາງການປະຕິບັດທີ່ທຸກຄົນຄວນປະຕິບັດ. ບໍ່ວ່າເຈົ້າເຮັດສິ່ງໃດ, ແມ່ນແຕ່ໃນເວລາທີ່ສື່ສານກັບອ້າຍເອື້ອຍນ້ອງຂອງເຈົ້າ, ເຈົ້າກໍສາມາດນຳເອົາການກະທຳຂອງເຈົ້າວາງໄວ້ຕໍ່ໜ້າພຣະເຈົ້າ ແລະ ສະແຫວງຫາການກວດສອບຂອງພຣະອົງ ແລະ ຕັ້ງໃຈທີ່ຈະເຊື່ອຟັງພຣະອົງເອງ; ສິ່ງນີ້ຈະເຮັດໃຫ້ສິ່ງທີ່ເຈົ້າປະຕິບັດຍິ່ງຈະຖືກຕ້ອງກວ່າເກົ່າຫຼາຍ. ພຽງແຕ່ຖ້າເຈົ້ານຳເອົາທຸກສິ່ງທີ່ເຈົ້າເຮັດມາວາງໄວ້ຕໍ່ໜ້າພຣະເຈົ້າ ແລະ ຍອມຮັບການກວດສອບຂອງພຣະອົງເທົ່ານັ້ນ ເຈົ້າຈຶ່ງຈະສາມາດເປັນຄົນໜຶ່ງທີ່ດຳລົງຢູ່ຕໍ່ໜ້າຂອງພຣະເຈົ້າໄດ້.

ຜູ້ທີ່ປາສະຈາກຄວາມເຂົ້າໃຈກ່ຽວກັບພຣະເຈົ້າ ຈະບໍ່ສາມາດເຊື່ອຟັງພຣະເຈົ້າໄດ້ຢ່າງສົມບູນ. ຄົນເຊັ່ນນີ້ແມ່ນລູກຫຼານຂອງຄວາມບໍ່ເຊື່ອຟັງ. ພວກເຂົາໃຝ່ສູງເກີນໄປ ແລະ ມີການກະບົດຫຼາຍເກີນໄປຢູ່ໃນຕົວພວກເຂົາ, ດັ່ງນັ້ນ ພວກເຂົາຈຶ່ງເຮັດໂຕຫ່າງເຫີນຈາກພຣະເຈົ້າ ແລະ ບໍ່ເຕັມໃຈທີ່ຈະຍອມຮັບການກວດສອບຂອງພຣະອົງ. ຄົນເຊັ່ນນີ້ບໍ່ສາມາດຖືກເຮັດໃຫ້ສົມບູນແບບໄດ້ໂດຍງ່າຍ. ບາງຄົນເລືອກວິທີການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ພວກເຂົາເລືອກການຍອມຮັບພຣະທຳເຫຼົ່ານັ້ນ. ພວກເຂົາຍອມຮັບຢ່າງໃດໜຶ່ງຂອງພຣະທຳຂອງພຣະເຈົ້າທີ່ສອດຄ່ອງກັບແນວຄິດຂອງພວກເຂົາ ໃນຂະນະທີ່ ປະຕິເສດພຣະທຳທີ່ບໍ່ສອດຄ່ອງ. ນີ້ບໍ່ແມ່ນການກະບົດ ແລະ ການຕໍ່ຕ້ານພຣະເຈົ້າທີ່ຈະແຈ້ງທີ່ສຸດບໍ? ຖ້າຜູ້ໃດຜູ້ໜຶ່ງເຊື່ອໃນພຣະເຈົ້າມາເປັນເວລາຫຼາຍໆປີ ໂດຍບໍ່ໄດ້ຮັບຄວາມເຂົ້າໃຈແມ່ນແຕ່ໜ້ອຍດຽວກ່ຽວກັບພຣະອົງ, ແລ້ວພວກເຂົາແມ່ນເປັນຄົນບໍ່ເຊື່ອ. ບັນດາຜູ້ທີ່ເຕັມໃຈຍອມຮັບການກວດສອບຂອງພຣະເຈົ້າ ແມ່ນບັນດາຜູ້ທີ່ສະແຫວງຫາຄວາມເຂົ້າໃຈກ່ຽວກັບພຣະອົງ, ຜູ້ທີ່ເຕັມໃຈຍອມຮັບພຣະທຳຂອງພຣະອົງ. ພວກເຂົາແມ່ນຜູ້ທີ່ຈະໄດ້ຮັບມໍລະດົກ ແລະ ພອນຂອງພຣະເຈົ້າ ແລະ ພວກເຂົາແມ່ນຜູ້ທີ່ໄດ້ຮັບພອນຫຼາຍທີ່ສຸດ. ພຣະເຈົ້າສາບແຊ່ງຜູ້ຄົນທີ່ບໍ່ມີບ່ອນວ່າງໃນໃຈຂອງພວກເຂົາໃຫ້ກັບພຣະອົງ ແລະ ພຣະອົງຂ້ຽນຕີ ແລະ ປະຖິ້ມຄົນດັ່ງກ່າວ. ຖ້າເຈົ້າບໍ່ຮັກພຣະເຈົ້າ ແລ້ວພຣະອົງກໍຈະປະຖິ້ມເຈົ້າ ແລະ ຖ້າເຈົ້າບໍ່ຟັງສິ່ງທີ່ເຮົາເວົ້າ, ແລ້ວເຮົາກໍສັນຍາວ່າພຣະວິນຍານຂອງພຣະເຈົ້າຈະປະຖິ້ມເຈົ້າ. ລອງເບິ່ງ ຖ້າເຈົ້າບໍ່ເຊື່ອ! ມື້ນີ້ ເຮົາຊີ້ແຈງເສັ້ນທາງແຫ່ງການປະຕິບັດໃຫ້ແກ່ເຈົ້າ, ແຕ່ເຈົ້າຈະເອົາໄປປະຕິບັດຕາມ ຫຼື ບໍ່ນັ້ນ ມັນກໍສຸດແລ້ວແຕ່ເຈົ້າ. ຖ້າເຈົ້າບໍ່ເຊື່ອ, ຖ້າເຈົ້າບໍ່ປະຕິບັດ, ເຈົ້າຈະເຫັນດ້ວຍຕົນເອງ ວ່າພຣະວິນຍານບໍລິສຸດປະຕິບັດພາລະກິດໃນຕົວເຈົ້າ ຫຼື ບໍ່! ຖ້າເຈົ້າບໍ່ສະແຫວງຫາຄວາມເຂົ້າໃຈກ່ຽວກັບພຣະເຈົ້າ, ແລ້ວພຣະວິນຍານບໍລິສຸດກໍຈະບໍ່ປະຕິບັດພາລະກິດໃນຕົວເຈົ້າ. ພຣະເຈົ້າປະຕິບັດພາລະກິດໃນຜູ້ຄົນທີ່ສະແຫວງຫາ ແລະ ເຊີດຊູພຣະທຳຂອງພຣະອົງ. ຍິ່ງເຈົ້າເຊີດຊູພຣະທຳຂອງພຣະເຈົ້າຫຼາຍເທົ່າໃດ, ພຣະວິນຍານຂອງພຣະອົງຍິ່ງຈະປະຕິບັດພາລະກິດຂອງພຣະອົງໃນຕົວເຈົ້າຫຼາຍເທົ່ານັ້ນ. ຍິ່ງຄົນໜຶ່ງເຊີດຊູພຣະທຳຂອງພຣະເຈົ້າຫຼາຍເທົ່າໃດ, ໂອກາດທີ່ພວກເຂົາຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບກໍມີຫຼາຍຂຶ້ນເທົ່ານັ້ນ. ພຣະເຈົ້າເຮັດໃຫ້ຜູ້ຮັກພຣະອົງຢ່າງແທ້ຈິງສົມບູນແບບ ແລະ ພຣະອົງເຮັດໃຫ້ຜູ້ທີ່ມີຫົວໃຈສະຫງົບສຸກຕໍ່ໜ້າພຣະອົງນັ້ນສົມບູນແບບ. ເພື່ອທີ່ຈະເຊີດຊູພາລະກິດທັງໝົດຂອງພຣະອົງ, ເພື່ອທີ່ຈະເຊີດຊູຄວາມສະຫວ່າງຂອງພຣະເຈົ້າ, ເພື່ອທີ່ຈະເຊີດຊູການສະຖິດຂອງພຣະເຈົ້າ, ເພື່ອທີ່ຈະເຊີດຊູການເບິ່ງແຍງ ແລະ ການປົກປ້ອງ

ຂອງພຣະເຈົ້າ, ເພື່ອທີ່ຈະເຊີດຊູວິທີທີ່ພຣະທຳຂອງພຣະເຈົ້າກາຍເປັນຄວາມເປັນຈິງ ແລະ ສະໜອງໃຫ້ກັບຊີວິດຂອງເຈົ້າ, ທຸກຢ່າງນີ້ແມ່ນສອດຄ່ອງກັບຫົວໃຈຂອງພຣະເຈົ້າໄດ້ດີທີ່ສຸດ. ຖ້າເຈົ້າເຊີດຊູພາລະກິດຂອງພຣະເຈົ້າ ນັ້ນກໍຄື ຖ້າເຈົ້າເຊີດຊູພາລະກິດທັງໝົດທີ່ພຣະອົງໄດ້ກະທຳຕໍ່ເຈົ້າ, ແລ້ວພຣະອົງກໍຈະອວຍພອນເຈົ້າ ແລະ ເຮັດໃຫ້ທຸກສິ່ງທີ່ເປັນຂອງເຈົ້າເພີ່ມທະວີຂຶ້ນ. ຖ້າເຈົ້າບໍ່ເຊີດຊູພຣະທຳຂອງພຣະເຈົ້າ, ພຣະອົງຈະບໍ່ປະຕິບັດພາລະກິດໃນຕົວເຈົ້າ, ແຕ່ພຣະອົງຈະມອບພຣະຄຸນພຽງເລັກນ້ອຍສຳລັບຄວາມເຊື່ອຂອງເຈົ້າ ຫຼື ອວຍພອນເຈົ້າດ້ວຍຄວາມຮັ່ງມີເລັກໆນ້ອຍໆ ຫຼື ຄວາມປອດໄພເລັກໆນ້ອຍໆສຳລັບຄອບຄົວຂອງເຈົ້າ. ເຈົ້າຄວນພະຍາຍາມເຮັດໃຫ້ພຣະທຳຂອງພຣະເຈົ້າກາຍເປັນຄວາມຈິງຂອງເຈົ້າ ແລະ ສາມາດເຮັດໃຫ້ພຣະອົງພໍໃຈ ແລະ ເປັນທີ່ພໍໃຈພຣະອົງເອງ; ເຈົ້າບໍ່ຄວນພຽງແຕ່ຊື່ນຊົມພຣະຄຸນຂອງພຣະອົງເທົ່ານັ້ນ. ບໍ່ມີຫຍັງຈະສຳຄັນສຳລັບຜູ້ເຊື່ອ ໄປກວ່າການໄດ້ຮັບພາລະກິດຂອງພຣະເຈົ້າ, ໄດ້ຮັບຄວາມສົມບູນແບບ ແລະ ກາຍເປັນຜູ້ທີ່ເຮັດຕາມຄວາມປະສົງຂອງພຣະເຈົ້າ. ນີ້ແມ່ນເປົ້າໝາຍທີ່ເຈົ້າຄວນສະແຫວງຫາ.

ທັງໝົດທີ່ມະນຸດໄດ້ສະແຫວງຫາໃນຍຸກແຫ່ງພຣະຄຸນແມ່ນຫຼ້າສະໄໝແລ້ວໃນຕອນນີ້, ຍ້ອນວ່າໃນຕອນນີ້ ມີມາດຕະຖານການສະແຫວງຫາທີ່ສູງກວ່າ; ສິ່ງທີ່ສະແຫວງຫາແມ່ນທັງສູງສິ່ງກວ່າ ແລະ ເປັນຈິງຫຼາຍກວ່າ, ສິ່ງທີ່ສະແຫວງຫາສາມາດຕອບສະໜອງສິ່ງທີ່ມະນຸດຕ້ອງການຢູ່ພາຍໃນໄດ້ດີກວ່າ. ໃນຍຸກອະດີດ, ພຣະເຈົ້າບໍ່ໄດ້ປະຕິບັດພາລະກິດໃນຜູ້ຄົນດັ່ງທີ່ພຣະອົງເຮັດໃນປັດຈຸບັນ; ພຣະອົງບໍ່ໄດ້ກ່າວກັບພວກເຂົາຫຼາຍດັ່ງທີ່ພຣະອົງໄດ້ກ່າວໃນທຸກວັນນີ້ ຫຼື ຄວາມຕ້ອງການຂອງພຣະອົງຕໍ່ພວກເຂົາກໍ່ບໍ່ໄດ້ສູງຄືທຸກວັນນີ້. ການທີ່ພຣະເຈົ້າເວົ້າເຖິງສິ່ງເຫຼົ່ານີ້ກັບພວກເຈົ້າໃນຕອນນີ້ກໍສະແດງວ່າ ເຈດຕະນາສູງສຸດຂອງພຣະເຈົ້າແມ່ນແນໃສ່ພວກເຈົ້າ, ໃສ່ຄົນກຸ່ມນີ້. ຖ້າເຈົ້າປາຖະໜາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບຢ່າງແທ້ຈິງ, ແລ້ວຈົ່ງສະແຫວງຫາມັນຄືດັ່ງເປົ້າໝາຍຫຼັກຂອງເຈົ້າ. ບໍ່ວ່າເຈົ້າກຳລັງແລ່ນໄປມາ, ກຳລັງເສຍສະຫຼະຕົວເຈົ້າເອງ, ກຳລັງປະຕິບັດໜ້າທີ່ ຫຼື ບໍ່ວ່າເຈົ້າໄດ້ຮັບການຝາກຝັງຈາກພຣະເຈົ້າກໍຕາມ, ຈຸດປະສົງກໍເພື່ອຖືກເຮັດໃຫ້ສົມບູນ ແລະ ປະຕິບັດຕາມຄວາມປະສົງຂອງພຣະເຈົ້າສະເໝີ ແລະ ເພື່ອບັນລຸເປົ້າໝາຍເຫຼົ່ານີ້. ຖ້າບາງຄົນເວົ້າວ່າພວກເຂົາບໍ່ໄດ້ສະແຫວງຫາຄວາມສົມບູນແບບຈາກພຣະເຈົ້າ ຫຼື ທາງເຂົ້າສູ່ຊີວິດ, ແຕ່ສະແຫວງຫາຄວາມສະຫງົບສຸກ ແລະ ປິຕິຍິນດີທາງເນື້ອໜັງເທົ່ານັ້ນ, ແລ້ວພວກເຂົາແມ່ນເປັນຄົນທີ່ຕາບອດທີ່ສຸດໃນບັນດາຄົນທັງປວງ. ຄົນທີ່ບໍ່ສະແຫວງຫາຄວາມເປັນຈິງແຫ່ງຊີວິດ, ແຕ່ສະແຫວງຫາພຽງແຕ່ຊີວິດນິລັນດອນໃນໂລກທີ່ຈະມາເຖິງ ແລະ ຄວາມປອດໄພໃນໂລກນີ້ເທົ່ານັ້ນ ແມ່ນເປັນຄົນຕາບອດທີ່ສຸດໃນບັນດາຄົນທັງປວງ. ດັ່ງນັ້ນ, ທັງໝົດທີ່ເຈົ້າເຮັດຄວນຖືກເຮັດເພື່ອຈຸດປະສົງຂອງການຖືກເຮັດໃຫ້ສົມບູນແບບ ແລະ ການຖືກຮັບໂດຍພຣະເຈົ້າ.

ພາລະກິດທີ່ພຣະເຈົ້າປະຕິບັດໃນຜູ້ຄົນແມ່ນເພື່ອສະໜອງໃຫ້ພວກເຂົາອີງຕາມຄວາມຕ້ອງການທີ່ແຕກຕ່າງກັນຂອງພວກເຂົາ. ຍິ່ງຊີວິດຂອງມະນຸດໃຫຍ່ໂຕຂຶ້ນເທົ່າໃດ, ພວກເຂົາກໍ່ຍິ່ງຕ້ອງການຫຼາຍສໍ່ານັ້ນ ແລະ ພວກເຂົາຍິ່ງສະແຫວງຫາຫຼາຍຂຶ້ນສໍ່ານັ້ນ. ຖ້າໃນໄລຍະນີ້ ເຈົ້າບໍ່ມີການສະແຫວງຫາ,

ສິ່ງນີ້ກໍພິສູດໃຫ້ເຫັນວ່າພຣະວິນຍານບໍລິສຸດໄດ້ປະຖິ້ມເຈົ້າແລ້ວ. ທຸກຄົນທີ່ສະແຫວງຫາຊີວິດຈະບໍ່ຖືກພຣະວິນຍານບໍລິສຸດປະຖິ້ມເລີຍ; ຜູ້ຄົນດັ່ງກ່າວສະແຫວງຫາຢູ່ສະເໝີ ແລະ ໂຫຍຫາໃນຫົວໃຈຂອງພວກເຂົາຢູ່ສະເໝີ. ຄົນດັ່ງກ່າວບໍ່ເຄີຍພໍໃຈກັບສິ່ງຕ່າງໆດັ່ງທີ່ພວກເຂົາເປັນໃນປັດຈຸບັນ ແຕ່ລະໄລຍະຂອງພາລະກິດຂອງພຣະວິນຍານບໍລິສຸດແນເພື່ອບັນລຸຜົນໃນຕົວເຈົ້າ, ແຕ່ຖ້າເຈົ້າພໍໃຈໃນຕົນເອງ, ຖ້າເຈົ້າບໍ່ມີຄວາມຕ້ອງການອີກຕໍ່ໄປ, ຖ້າເຈົ້າບໍ່ຍອມຮັບພາລະກິດຂອງພຣະວິນຍານບໍລິສຸດອີກຕໍ່ໄປ, ແລ້ວພຣະອົງກໍຈະປະຖິ້ມເຈົ້າ. ຜູ້ຄົນຕ້ອງການການກວດສອບຂອງພຣະເຈົ້າໃນແຕ່ລະມື້; ພວກເຂົາຕ້ອງການການຈັດຕຽມຢ່າງຫຼວງຫຼາຍຈາກພຣະເຈົ້າໃນແຕ່ລະມື້. ຜູ້ຄົນສາມາດເຮັດໂດຍບໍ່ໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃນແຕ່ລະມື້ໄດ້ບໍ? ຖ້າບາງຄົນຮູ້ສຶກຄືກັບວ່າພວກເຂົາບໍ່ສາມາດກິນ ຫຼື ດື່ມພຣະທຳຂອງພຣະເຈົ້າໄດ້ຢ່າງພຽງພໍຢູ່ສະເໝີ, ຖ້າພວກເຂົາສະແຫວງຫາມັນຢູ່ສະເໝີ ແລະ ຫິວ ແລະ ກະຫາຍຫາມັນຢູ່ສະເໝີ, ພຣະວິນຍານບໍລິສຸດຈະປະຕິບັດພາລະກິດໃນຕົວພວກເຂົາຢູ່ຕະຫຼອດເວລາ. ຍິ່ງຜູ້ໃດຜູ້ໜຶ່ງໂຫຍຫາຫຼາຍເທົ່າໃດ, ສິ່ງຕ່າງໆທີ່ເປັນຈິງຍິ່ງຈະສາມາດອອກມາຈາກການສົນທະນາຂອງເຂົາຫຼາຍເທົ່ານັ້ນ. ຍິ່ງຜູ້ໃດຜູ້ໜຶ່ງສະແຫວງຫາຄວາມຈິງຫຼາຍເທົ່າໃດ, ພວກເຂົາກໍຍິ່ງບັນລຸການເຕີບໂຕໃນຊີວິດຂອງພວກເຂົາໄດ້ໄວຫຼາຍສໍ່ານັ້ນ, ເຮັດໃຫ້ພວກເຂົາມີອຸດົມສົມບູນໃນປະສົບການ ແລະ ເປັນຜູ້ອາໄສທີ່ຮັ່ງມີໃນເຮືອນຂອງພຣະເຈົ້າ.

# ຜູ້ທີ່ເຊື່ອຟັງພຣະເຈົ້າດ້ວຍໃຈຈິງ ຈະຖືກພຣະເຈົ້າຮັບເອົາຢ່າງແນ່ນອນ

ພາລະກິດຂອງພຣະວິນຍານບໍລິສຸດປ່ຽນໄປໃນແຕ່ລະມື້. ພາລະກິດນັ້ນສູງສົ່ງຂຶ້ນຕາມແຕ່ລະບາດກ້າວ, ຕາມການເປີດເຜີຍແຫ່ງວັນໃໝ່ທີ່ສູງສົ່ງກວ່າວັນນີ້ ໂດຍສູງສົ່ງຂຶ້ນ ແລະ ສູງຂຶ້ນໄປຕາມແຕ່ລະຂັ້ນຕອນ. ນັ້ນຄືພາລະກິດຂອງພຣະເຈົ້າເພື່ອເຮັດໃຫ້ມະນຸດສົມບູນ. ຫາກມະນຸດບໍ່ສາມາດກ້າວຕາມທັນ, ພວກເຂົາກໍອາດຈະຖືກປະຖິ້ມໄດ້ທຸກເວລາ. ຖ້າຫາກມະນຸດບໍ່ມີຫົວໃຈທີ່ເຊື່ອຟັງ, ພວກເຂົາຈະບໍ່ສາມາດເດີນຕາມໄປເຖິງທີ່ສຸດ. ຍຸກເກົ່າໄດ້ຜ່ານໄປ; ນີ້ແມ່ນຍຸກໃໝ່. ໃນຍຸກໃໝ່ນີ້ແມ່ນຕ້ອງໄດ້ເຮັດພາລະກິດໃໝ່. ໂດຍສະເພາະໃນຍຸກສຸດທ້າຍທີ່ຜູ້ຄົນຖືກເຮັດໃຫ້ສົມບູນ, ພຣະເຈົ້າຈະປະຕິບັດພາລະກິດໃໝ່ໃຫ້ໄວຂຶ້ນ, ເພາະສະນັ້ນ ຖ້າບໍ່ມີການເຊື່ອຟັງໃນຈິດໃຈຂອງພວກເຂົາ ຜູ້ຄົນຈະພົບຄວາມຫຍຸ້ງຍາກໃນການເດີນຕາມບາດກ້າວຂອງພຣະເຈົ້າ. ພຣະເຈົ້າບໍ່ໄດ້ປະຕິບັດຕາມກົດໃດໆ ແລະພຣະອົງບໍ່ໄດ້ປະຕິບັດກັບພາລະກິດຂອງພຣະອົງວ່າເປັນສິ່ງທີ່ປ່ຽນແປງບໍ່ໄດ້. ແຕ່ພາລະກິດທີ່ພຣະອົງປະຕິບັດຢູ່ແມ່ນໃໝ່ສະເໝີ ແລະ ສູງສົ່ງສະເໝີ. ພາລະກິດຂອງພຣະອົງແມ່ນນັບມື້ນັບເປັນຈິງໃນແຕ່ລະບາດກ້າວ ແລະ ນັບມື້ນັບສອດຄ່ອງກັບຄວາມຕ້ອງການຕົວຈິງຂອງມະນຸດ. ພາຍຫຼັງທີ່ຜູ້ຄົນໄດ້ປະສົບກັບພາລະກິດແບບນີ້ເທົ່ານັ້ນ ພວກເຂົາຈຶ່ງສາມາດສຳເລັດການປ່ຽນແປງຈິດໃຈຂັ້ນສຸດທ້າຍຂອງພວກເຂົາ. ຄວາມຮູ້ຂອງມະນຸດກ່ຽວກັບຊີວິດແມ່ນສູງຮອດລະດັບທີ່ສູງຂຶ້ນເລື້ອຍໆ ແລະ ເຊັ່ນດຽວກັນ ພາລະກິດຂອງພຣະເຈົ້າກໍ່ສູງຮອດລະດັບທີ່ສູງຂຶ້ນເລື້ອຍໆ. ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈຶ່ງຈະຖືກເຮັດໃຫ້ສົມບູນ ແລະ ເໝາະທີ່ຈະໃຫ້ພຣະເຈົ້ານຳໃຊ້. ພຣະເຈົ້າດຳເນີນພາລະກິດດ້ວຍວິທີນີ້ ຍ້ອນດ້ານໜຶ່ງກໍ່ເພື່ອຕອບໂຕ້ ແລະ ຫັນປ່ຽນຄວາມຄິດຂອງມະນຸດ ແລະ ອີກດ້ານໜຶ່ງກໍ່ເພື່ອນຳພາມະນຸດໄປສູ່ສະພາບທີ່ສູງຂຶ້ນ ແລະ ເປັນຈິງຫຼາຍຂຶ້ນ ເພື່ອເຂົ້າສູ່ໂລກທີ່ສູງສຸດຂອງຄວາມເຊື່ອໃນພຣະເຈົ້າເພື່ອວ່າໃນທີ່ສຸດແລ້ວ ຄວາມປະສົງຂອງພຣະເຈົ້າຈະໄດ້ສຳເລັດ. ທຸກຄົນທີ່ບໍ່ເຊື່ອຟັງໂດຍທຳມະຊາດທີ່ເຕັມໃຈຄັດຄ້ານຈະຖືກປ່ອຍຖິ້ມໄວ້ຢູ່ໃນຂັ້ນຕອນນີ້ຂອງພາລະກິດທີ່ວ່ອງໄວ ແລະ ກ້າວໜ້າຢ່າງດຸເດືອດຂອງພຣະເຈົ້າ; ຜູ້ທີ່ເຕັມໃຈເຊື່ອຟັງ ແລະ ຜູ້ທີ່ຍິນດີຖ່ອມຕົນເທົ່ານັ້ນທີ່ຈະສາມາດກ້າວໄປເຖິງຈຸດສຸດທ້າຍຂອງເສັ້ນທາງ. ໃນພາລະກິດແບບນີ້, ພວກເຈົ້າທຸກຄົນຕ້ອງຮຽນຮູ້ວິທີການອ່ອນນ້ອມ ແລະ ວິທີປ່ອຍວາງແນວຄວາມຄິດຂອງພວກເຈົ້າ. ພວກເຈົ້າຄວນລະວັງໃນທຸກຂັ້ນຕອນທີ່ພວກເຈົ້າດຳເນີນ. ຖ້າຫາກພວກເຈົ້າບໍ່ລະວັງ, ພວກເຈົ້າຈະກາຍເປັນຄົນທີ່ຖືກປະຕິເສດໂດຍພຣະວິນຍານບໍລິສຸດ ແລະ ເປັນຜູ້ທີ່ຂັດຂວາງພາລະກິດຂອງພຣະເຈົ້າ. ກ່ອນທີ່ຈະປະສົບກັບຂັ້ນຕອນຂອງພາລະກິດນີ້, ກົດເກນ ແລະ ກົດໝາຍເກົ່າຂອງມະນຸດແມ່ນມີຫຼາຍຈົນນັບບໍ່ຖ້ວນ ເຊິ່ງເຮັດໃຫ້ພວກເຂົາຫຼົງລືມ ແລະ ຜົນທີ່ໄດ້ຮັບກໍຄືພວກເຂົາກາຍເປັນຄົນອວດດີ ແລະ ຫຼົງລືມຕົວ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ແມ່ນອຸປະສັກທີ່ກີດກັ້ນມະນຸດບໍ່ໃຫ້ຮັບເອົາພາລະກິດໃໝ່ຂອງພຣະເຈົ້າ; ພວກເຂົາກາຍເປັນສັດຕູຕໍ່ຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າ. ມັນອັນຕະລາຍສຳລັບຜູ້ຄົນທີ່ຈະບໍ່ມີທັງຄວາມເຊື່ອໃນຈິດໃຈຂອງ

ພວກເຂົາ ແລະ ການປາດຖະໜາຄວາມເປັນຈິງ. ຖ້າເຈົ້າອ່ອນນ້ອມຕໍ່ພາລະກິດ ແລະ ພຣະທຳທຳມະດາເທົ່ານັ້ນ ແລະ ບໍ່ສາມາດຮັບເອົາຄວາມເລິກເຊິ່ງໃດໆ, ເຈົ້າກໍເປັນຜູ້ທີ່ຍຶດຕິດກັບແນວທາງເກົ່າ ແລະ ບໍ່ສາມາດນຳທັນພາລະກິດຂອງພຣະວິນຍານບໍລິສຸດໄດ້. ພາລະກິດທີ່ພຣະເຈົ້າກະທຳແມ່ນແຕກຕ່າງກັນໃນແຕ່ລະໄລຍະ. ຖ້າເຈົ້າມີຄວາມເຊື່ອຟັງຫຼາຍຕໍ່ພາລະກິດຂອງພຣະເຈົ້າໃນໄລຍະໜຶ່ງ ແຕ່ໃນອີກໄລຍະຕໍ່ໄປຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າແມ່ນໜ້ອຍລົງ ຫຼື ເຈົ້າບໍ່ສາມາດມີຄວາມເຊື່ອຟັງເລີຍ, ພຣະເຈົ້າກໍຈະຖິ້ມປະເຈົ້າ. ຖ້າເຈົ້າເດີນຕາມທັນພຣະເຈົ້າໃນເວລາທີ່ພຣະອົງກ້າວສູ່ຂັ້ນຕອນນີ້, ເຈົ້າກໍຕ້ອງສືບຕໍ່ເດີນຕາມພຣະອົງໃຫ້ທັນໃນເວລາທີ່ພຣະອົງກ້າວເຂົ້າສູ່ຂັ້ນຕອນຕໍ່ໄປ; ເມື່ອນັ້ນເທົ່ານັ້ນ ເຈົ້າຈຶ່ງຈະເປັນຜູ້ເຊື່ອຟັງໃນພຣະວິນຍານບໍລິສຸດ. ໃນເມື່ອເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຕ້ອງເຊື່ອຟັງຢ່າງສະໝໍ່າສະເໝີ. ເຈົ້າບໍ່ສາມາດພຽງແຕ່ເຊື່ອຟັງເວລາຄິດຢາກເຊື່ອ ແລະ ບໍ່ເຊື່ອເມື່ອບໍ່ຢາກເຊື່ອ. ພຣະເຈົ້າບໍ່ຍົກຍ້ອງຄວາມເຊື່ອຟັງແບບນີ້. ຖ້າເຈົ້າບໍ່ສາມາດເດີນຕາມທັນພາລະກິດໃໝ່ທີ່ເຮົາໄດ້ເຂົ້າໄດ້ສົນທະນາ ແລະ ສືບຕໍ່ຍຶດຖືໃນຄຳເວົ້າເກົ່າ ແລ້ວຈະມີຄວາມກ້າວໜ້າໃນຊີວິດຂອງເຈົ້າໄດ້ຢ່າງໃດ? ພາລະກິດຂອງພຣະເຈົ້າແມ່ນເພື່ອສະໜອງໃຫ້ເຈົ້າໂດຍຜ່ານພຣະທຳຂອງພຣະອົງ. ເມື່ອເຈົ້າເຊື່ອຟັງ ແລະ ຍອມຮັບພຣະທຳຂອງພຣະອົງ, ພຣະວິນຍານບໍລິສຸດກໍຈະປະຕິບັດພາລະກິດໃນຕົວເຈົ້າຢ່າງແນ່ນອນ. ພຣະວິນຍານບໍລິສຸດດຳເນີນໄປຕາມທີ່ເຮົາກ່າວຢ່າງຖືກຕ້ອງ; ຈົ່ງເຮັດຕາມທີ່ເຮົາໄດ້ກ່າວ ແລະ ພຣະວິນຍານບໍລິສຸດຈະປະຕິບັດພາລະກິດໃນຕົວເຈົ້າທັນທີ. ເຮົາເຍືອງແສງສະຫວ່າງໃໝ່ໃຫ້ພວກເຈົ້າເພື່ອໃຫ້ເຫັນ, ນຳພາພວກເຈົ້າມາສູ່ແສງສະຫວ່າງແຫ່ງປັດຈຸບັນ ແລະ ເມື່ອເຈົ້າຍ່າງເຂົ້າສູ່ແສງສະຫວ່າງນີ້, ພຣະວິນຍານບໍລິສຸດຈະປະຕິບັດພາລະກິດໃນຕົວເຈົ້າທັນທີ. ມີບາງຄົນທີ່ຍັງມີນິໄສດື້ດ້ານ ແລະ ເວົ້າວ່າ: "ຂ້ານ້ອຍຈະບໍ່ຍອມເຮັດຕາມທີ່ພຣະອົງບອກ". ດັ່ງນັ້ນ, ເຮົາຂໍບອກເຈົ້າວ່າຕອນນີ້ເຈົ້າໄດ້ມາເຖິງຈຸດສຸດທ້າຍຂອງເສັ້ນທາງແລ້ວ; ເຈົ້າເຫືອດແຫ້ງ ແລະ ບໍ່ມີຊີວິດອີກຕໍ່ໄປ. ສະນັ້ນ ໃນປະສົບການຂອງການປ່ຽນແປງຈິດໃຈຂອງພວກເຈົ້າ ແມ່ນບໍ່ມີສິ່ງໃດທີ່ສຳຄັນໄປກວ່າການກ້າວໃຫ້ທັນແສງສະຫວ່າງໃນປັດຈຸບັນ. ພຣະວິນຍານບໍລິສຸດບໍ່ພຽງແຕ່ປະຕິບັດພາລະກິດຕໍ່ບາງຄົນທີ່ຖືກພຣະເຈົ້າໃຊ້ເທົ່ານັ້ນ ແຕ່ປະຕິບັດຫຼາຍກວ່ານັ້ນໃນຄຣິສຕະຈັກ. ພຣະອົງສາມາດປະຕິບັດພາລະກິດໃນຜູ້ໃດກໍໄດ້. ພຣະອົງອາດປະຕິບັດພາລະກິດໃນຕົວເຈົ້າໃນຕອນນີ້ ແລະ ເມື່ອເຈົ້າຈະປະສົບກັບພາລະກິດນີ້. ໃນໄລຍະຕໍ່ໄປ, ພຣະອົງອາດປະຕິບັດພາລະກິດໃນຄົນອື່ນ ເຊິ່ງໃນກໍລະນີນີ້ເຈົ້າຕ້ອງຮີບຕິດຕາມ; ຍິ່ງເຈົ້າເດີນຕາມແສງສະຫວ່າງປັດຈຸບັນຢ່າງໃກ້ຊິດເທົ່າໃດ, ຊີວິດຂອງເຈົ້າກໍຍິ່ງຈະເຕີບໃຫຍ່ຂຶ້ນເທົ່ານັ້ນ. ບໍ່ວ່າບາງຄົນຈະເປັນຄົນແບບໃດ ແຕ່ຖ້າຕາບໃດທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດໃນຕົວພວກເຂົາ, ເຈົ້າກໍຕ້ອງປະຕິບັດຕາມ. ຈົ່ງນຳໃຊ້ປະສົບການຂອງພວກເຂົາເຈົ້າເຂົ້າສູ່ຕົວເຈົ້າເອງ ແລະ ເຈົ້າຈະໄດ້ຮັບສິ່ງທີ່ສູງສົ່ງຂຶ້ນອີກ. ເມື່ອເຮັດດັ່ງນັ້ນ, ເຈົ້າຈະມີຄວາມຄືບໜ້າໄວຂຶ້ນ. ນີ້ແມ່ນເສັ້ນທາງແຫ່ງຄວາມສົມບູນສຳລັບມະນຸດ ແລະ ວິທີແຫ່ງການເຕີບໃຫຍ່ຂອງຊີວິດ. ເສັ້ນທາງສູ່ຄວາມສົມບູນຈະສຳເລັດ ແມ່ນໂດຍຜ່ານການເຊື່ອຟັງຂອງເຈົ້າທີ່ມີຕໍ່ພາລະກິດຂອງພະວິນຍານບໍລິສຸດ. ເຈົ້າບໍ່ຮູ້ວ່າຕ້ອງຜ່ານຄົນປະເພດໃດພຣະເຈົ້າຈຶ່ງຈະເຮັດໃຫ້ເຈົ້າກາຍເປັນຄົນສົມບູນ,

ຕ້ອງຜ່ານໃຜແດ່ ແລະ ເຫດການໃດແດ່ ຫຼື ສິ່ງໃດແດ່ ພຣະອົງຈຶ່ງຈະເຮັດໃຫ້ເຈົ້າສາມາດໄດ້ຮັບ ແລະ ເຫັນສິ່ງຕ່າງໆ. ຖ້າເຈົ້າສາມາດຍ່າງຕາມທາງທີ່ຖືກຕ້ອງນີ້, ນັ້ນສະແດງວ່າພໍມີຫວັງທີ່ຍິ່ງໃຫຍ່ ສຳລັບເຈົ້າທີ່ຈະຖືກເຮັດໃຫ້ສົມບູບໂດຍພຣະເຈົ້າ. ຖ້າຫາກເຈົ້າບໍ່ສາມາດເຮັດໄດ້ດັ່ງນັ້ນ, ສະແດງວ່າ ອະນາຄົດຂອງເຈົ້າຈະມືດມົວ ແລະ ໄຮ້ແສງສະຫວ່າງ. ເມື່ອເຈົ້າເຂົ້າມາຖືກທາງ, ເຈົ້າຈະໄດ້ຮັບ ການເປີດເຜີຍໃນທຸກສິ່ງທຸກຢ່າງ. ບໍ່ວ່າພຣະວິນຍານບໍລິສຸດຈະເປີດເຜີຍສິ່ງໃດຕໍ່ຄົນອື່ນໆກໍຕາມ, ຖ້າ ເຈົ້າດຳເນີນການບົນພື້ນຖານຄວາມຮູ້ຂອງເຂົາເຈົ້າເພື່ອປະສົບກັບສິ່ງຕ່າງໆດ້ວຍຕົວເອງ, ປະສົບການນີ້ ກໍຈະກາຍເປັນສ່ວນໜຶ່ງໃນຊີວິດຂອງເຈົ້າ ແລະ ເຈົ້າຈະສາມາດມອບປະສົບການນີ້ຕໍ່ໃຫ້ກັບຄົນອື່ນ ໄດ້. ຜູ້ທີ່ມອບປະສົບການໃຫ້ຄົນອື່ນດ້ວຍການເວົ້າຈົ້ແບບນົກແກ້ວແມ່ນຜູ້ທີ່ບໍ່ມີປະສົບການ; ເຈົ້າ ຕ້ອງຮຽນຮູ້ຄົ້ນຫາ ໂດຍຜ່ານຄວາມສະຫວ່າງ ແລະ ແສງເຍືອງທາງຂອງຄົນອື່ນ ເຊິ່ງເປັນການເຝິກຝົນ ກ່ອນທີ່ເຈົ້າຈະສາມາດເລີ່ມຕົ້ນບອກເຫຼົ່າປະສົບການ ແລະ ຄວາມຮູ້ທີ່ແທ້ຈິງຂອງຕົນເອງ. ສິ່ງນີ້ຈະ ເປັນປະໂຫຍດອັນໃຫຍ່ຫຼວງແກ່ຕົວເຈົ້າເອງ. ເຈົ້າຄວນໄດ້ຮັບປະສົບການໃນວິທີນີ້ ແລະ ເຊື່ອຟັງທຸກ ສິ່ງທີ່ມາຈາກພຣະເຈົ້າ. ເຈົ້າຄວນສະແຫວງຫາຄວາມປະສົງຂອງພຣະເຈົ້າໃນທຸກສິ່ງ ແລະ ສຶກສາໃຫ້ ເປັນບົດຮຽນໃນທຸກສິ່ງ ເພື່ອວ່າຊີວິດຂອງພວກເຈົ້າຈະເຕີບໃຫຍ່. ການປະຕິບັດແບບນີ້ ເຮັດໃຫ້ ກ້າວໜ້າໄວທີ່ສຸດ.

ພຣະວິນຍານບໍລິສຸດໃຫ້ແສງສະຫວ່າງແກ່ເຈົ້າໂດຍຜ່ານປະສົບການຕົວຈິງ ແລະ ເຮັດໃຫ້ເຈົ້າສົມ ບູບຜ່ານຄວາມສັດທາຂອງເຈົ້າ. ເຈົ້າເຕັມໃຈທີ່ຈະຖືກເຮັດໃຫ້ສົມບູນບໍ່? ຖ້າຫາກເຈົ້າເຕັມໃຈທີ່ຈະ ຖືກເຮັດໃຫ້ສົມບູບໂດຍພຣະເຈົ້າຢ່າງແທ້ຈິງ, ເຈົ້າຈະມີຄວາມກ້າຫານທີ່ຈະປະຖິ້ມເນື້ອໜັງຂອງເຈົ້າ, ເຈົ້າຈະສາມາດດຳເນີນຕາມພຣະທຳຂອງພຣະເຈົ້າ ແລະ ເຈົ້າຈະບໍ່ຢູ່ເສີຍ ຫຼື ເປັນຄົນອ່ອນແອ. ເຈົ້າຈະ ສາມາດເຊື່ອຟັງທຸກຢ່າງທີ່ມາຈາກພຣະເຈົ້າ ແລະ ທຸກໆການກະທຳຂອງພວກເຈົ້າຈະເປັນສິ່ງທີ່ປະເສີດ ຕໍ່ພຣະເຈົ້າ ບໍ່ວ່າຈະກະທຳໃນທີ່ສາທາລະນະ ຫຼື ໃນສະຖານທີ່ສ່ວນຕົວ. ຖ້າເຈົ້າເປັນຄົນທີ່ສັດຊື່ ແລະ ປະຕິບັດຄວາມເປັນຈິງໃນທຸກໆສິ່ງ ເຈົ້າກໍ່ຈະກາຍເປັນຄົນທີ່ສົມບູບ. ພວກທີ່ໜ້າຫວ້າຍຫຼັງຫຼອກຜູ້ທີ່ ຕໍ່ໜ້າເຮັດຈັ່ງໜຶ່ງ ແລະ ລັບຫຼັງເຮັດແບບອື່ນແມ່ນຜູ້ບໍ່ເຕັມໃຈທີ່ຈະຖືກເຮັດໃຫ້ສົມບູນ. ພວກເຂົາທຸກ ຄົນເປັນບຸດແຫ່ງຄວາມພິນາດ ແລະ ການທຳລາຍລ້າງ; ພວກເຂົາບໍ່ແມ່ນຄົນຂອງພຣະເຈົ້າ ແຕ່ເປັນຄົນ ຂອງຊາຕານ. ພວກເຂົາບໍ່ແມ່ນຄົນປະເພດທີ່ພຣະເຈົ້າຊົງເລືອກເອົາ! ຖ້າການກະທຳ ແລະ ພຶດຕິກຳ ຂອງເຈົ້າບໍ່ສາມາດສະແດງອອກຢູ່ຕໍ່ໜ້າພຣະເຈົ້າ ຫຼື ບໍ່ສາມາດເຫັນໂດຍພຣະວິນຍານຂອງພຣະເຈົ້າ, ນີ້ກໍພິສູດວ່າມີບາງສິ່ງທີ່ຜິດປົກກະຕິໃນໂຕເຈົ້າ. ຖ້າເຈົ້າຍອມຮັບຄຳພິພາກສາ ແລະ ການຂ້ຽນຕີຂອງ ພຣະເຈົ້າເທົ່ານັ້ນ ແລະ ໃສ່ໃຈກັບການປ່ຽນແປງຈິດໃຈຂອງເຈົ້າ, ເຈົ້າຈຶ່ງຈະສາມາດເຂົ້າມາສູ່ເສັ້ນທາງ ໃນການຖືກເຮັດໃຫ້ສົມບູນໄດ້. ຖ້າເຈົ້າເຕັມໃຈທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ແລະ ປະຕິບັດ ຕາມຄວາມປະສົງຂອງພຣະເຈົ້າ, ເຈົ້າກໍຄວນເຊື່ອຟັງພາລະກິດຂອງພຣະເຈົ້າທັງໝົດ ໂດຍປາສະຈາກ ສຽງຈົ່ມວ່າແມ່ນແຕ່ຄຳດຽວ, ປາສະຈາກການຄາດເດົາ ການປະເມີນຜົນ ຫຼື ຕັດສິນພາລະກິດຂອງ ພຣະເຈົ້າ. ນີ້ແມ່ນຂໍ້ເງື່ອນໄຂຕໍ່າສຸດໃນການທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ເງື່ອນໄຂທີ່ຈຳເປັນ

ສຳລັບຜູ້ທີ່ສະແຫວງຫາໃຫ້ພຣະເຈົ້າເຮັດໃຫ້ສົມບູນກໍຄືສິ່ງນີ້: ເຮັດທຸກສິ່ງທຸກຢ່າງດ້ວຍໃຈທີ່ຮັກພຣະເຈົ້າ. "ການເຮັດທຸກສິ່ງທຸກຢ່າງດ້ວຍໃຈທີ່ຮັກພຣະເຈົ້າ" ໝາຍຄວາມວ່າແນວໃດ? ມັນໝາຍຄວາມວ່າທຸກການກະທຳ ແລະ ພຶດຕິກຳຂອງເຈົ້າສາມາດສະແດງອອກຕໍ່ໜ້າພຣະເຈົ້າໄດ້. ຍ້ອນເຈົ້າມີເຈດຕະນາທີ່ຖືກຕ້ອງ, ເຈົ້າຈະບໍ່ມີຄວາມຢ້ານກົວທີ່ຈະສະແດງສິ່ງເຫຼົ່ານັ້ນຕໍ່ໜ້າພຣະເຈົ້າ ຫຼື ຕໍ່ໜ້າອ້າຍເອື້ອຍນ້ອງຂອງເຈົ້າ ບໍ່ວ່າການກະທຳຂອງເຈົ້າຈະຖືກ ຫຼື ຜິດກໍຕາມ ແລະ ເຈົ້າຈະກ້າປະຕິຍານຕໍ່ໜ້າພຣະເຈົ້າ. ເຈົ້າຕ້ອງສະແດງທຸກຄວາມຕັ້ງໃຈ, ຄວາມນຶກຄິດ ແລະ ແນວຄິດຂອງເຈົ້າຢູ່ຕໍ່ໜ້າພຣະເຈົ້າເພື່ອການພິຈາລະນາຂອງພຣະອົງ; ຖ້າຫາກເຈົ້າປະຕິບັດ ແລະ ເຂົ້າສູ່ເສັ້ນທາງນີ້, ຄວາມກ້າວໜ້າໃນຊີວິດຂອງເຈົ້າກໍຈະມີຄວາມວ່ອງໄວ.

ໃນເມື່ອເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຕ້ອງມີສັດທາໃນພຣະທຳທຸກຂໍ້ຂອງພຣະເຈົ້າ ແລະ ໃນພາລະກິດຂອງພຣະອົງທັງໝົດ. ນັ້ນໝາຍຄວາມວ່າ ເມື່ອເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຕ້ອງເຊື່ອຟັງພຣະອົງ. ຖ້າວ່າເຈົ້າເຮັດບໍ່ໄດ້, ມັນກໍບໍ່ສຳຄັນທີ່ເຈົ້າຈະເຊື່ອໃນພຣະເຈົ້າ ຫຼື ບໍ່. ຖ້າເຈົ້າເຊື່ອໃນພຣະເຈົ້າມາຫຼາຍປີ, ແຕ່ບໍ່ເຄີຍເຊື່ອຟັງພຣະອົງ ແລະ ບໍ່ຍອມຮັບພຣະທຳທຸກຄຳຂອງພຣະອົງ ແຕ່ພັດຂໍໃຫ້ພຣະເຈົ້າຍອມເຈົ້າ ແລະ ເຮັດຕາມຄວາມຄິດຂອງເຈົ້າ, ເຈົ້າກໍເປັນຄົນທີ່ກະບົດທີ່ສຸດ ແລະ ເຈົ້າກໍແມ່ນຜູ້ທີ່ມີຄວາມເຊື່ອ. ຄົນເຊັ່ນນີ້ຈະສາມາດເຊື່ອຟັງພາລະກິດ ແລະ ພຣະທຳຂອງພຣະເຈົ້າທີ່ບໍ່ສອດຄ່ອງກັບແນວຄິດຂອງມະນຸດໄດ້ຢ່າງໃດ? ຜູ້ທີ່ກະບົດທີ່ສຸດຄືຜູ້ທີ່ປະຕິເສດ ແລະ ຕໍ່ຕ້ານພຣະເຈົ້າໂດຍເຈດຕະນາ. ພວກເຂົາເປັນສັດຕູຂອງພຣະເຈົ້າ ແລະ ຕໍ່ຕ້ານສາສະໜາຄຣິດ. ທັດສະນະຂອງພວກເຂົາແມ່ນທັດສະນະທີ່ບໍ່ດີຕໍ່ພາລະກິດໃໝ່ຂອງພຣະເຈົ້າຢູ່ສະເໝີ; ພວກເຂົາບໍ່ເຄີຍມີຄວາມຕັ້ງໃຈແມ່ນແຕ່ໜ້ອຍດຽວໃນການອ່ອນນ້ອມ ແລະ ພວກເຂົາບໍ່ເຄີຍອ່ອນນ້ອມ ຫຼື ຖ່ອມຕົນຢ່າງເຕັມໃຈ. ພວກເຂົາຍົກຍ້ອງຕົວເອງຕໍ່ໜ້າຄົນອື່ນ ແລະ ບໍ່ເຄີຍອ່ອນນ້ອມຕໍ່ໃຜເລີຍ. ຕໍ່ໜ້າພຣະເຈົ້າ ພວກເຂົາຖືວ່າຕົນເອງເກັ່ງທີ່ສຸດໃນການເທດສະໜາພຣະທຳ ແລະ ມີຄວາມຊຳນານທີ່ສຸດໃນການປະຕິບັດວຽກງານກັບຄົນອື່ນ. ພວກເຂົາບໍ່ເຄີຍປະຖິ້ມ "ຊັບສົມບັດ" ທີ່ພວກເຂົາຄອບຄອງ ແຕ່ພັດຖືເອົາສິ່ງເຫຼົ່ານັ້ນເປັນມໍລະດົກຕົກທອດຈາກວົງຕະກູນເພື່ອນະມັດສະການ, ເພື່ອທີ່ຈະເທດສະໜາກ່ຽວກັບຄົນອື່ນ ແລະ ໃຊ້ເຂົາເຈົ້າເພື່ອສັ່ງສອນຄົນໂງ່ທີ່ຫຼົງເຊື່ອພວກເຂົາ. ມີຜູ້ຄົນແບບນີ້ຈຳນວນຫຼາຍຢູ່ໃນຄຣິສຕະຈັກ. ອາດເວົ້າໄດ້ວ່າ "ວິລະບູລຸດທີ່ບໍ່ເຄີຍພ່າຍແພ້" ຮຸ່ນຕໍ່ຮຸ່ນອາໄສຢູ່ໃນເຮືອນຂອງພຣະເຈົ້າ. ພວກເຂົາຖືເອົາຄຳເທດສະໜາ (ຫຼັກຄຳສອນ) ເປັນໜ້າທີ່ສູງສຸດຂອງພວກເຂົາ. ທຸກປີ ແລະ ທຸກລຸ້ນ, ພວກເຂົາດຳເນີນການຢ່າງຈິງຈັງໃນການບັງຄັບໃຊ້ໜ້າທີ່ "ສັກສິດ ແລະ ຂັດຂືນບໍ່ໄດ້" ຂອງພວກເຂົາ. ບໍ່ມີໃຜກ້າແຕະຕ້ອງພວກເຂົາ; ບໍ່ມີແມ່ນແຕ່ຄົນດຽວທີ່ກ້າຕິຕຽນພວກເຂົາຢ່າງເປີດເຜີຍ. ພວກເຂົາກາຍເປັນ "ກະສັດ" ໃນເຮືອນຂອງພຣະເຈົ້າ, ອາລະວາດໄປທົ່ວ ໃນຂະນະທີ່ພວກເຂົາກົດຂີ່ຂົ່ມເຫັງຄົນອື່ນໃນທຸກກຸ່ມອາຍຸ. ຜີສາດຮ້າຍຝູງນີ້ຊອກຫາການຮ່ວມມື ແລະ ທຳລາຍພາລະກິດຂອງເຮົາ; ແລ້ວເຮົາຈະອະນຸຍາດໃຫ້ຜີສາດຮ້າຍທີ່ມີຊີວິດເຫຼົ່ານີ້ມີຢູ່ຕໍ່ໜ້າຕໍ່ຕາເຮົາໄດ້ແນວໃດ? ກະທັ້ງຜູ້ທີ່ເຊື່ອຟັງພຽງເຄິ່ງດຽວຍັງບໍ່ສາມາດເດີນໄປຈົນເຖິງຈຸດສຸດທ້າຍໄດ້, ແລ້ວແຮງໄກທີ່ພວກທໍຣະລາດເຫຼົ່ານີ້ທີ່ບໍ່ມີຄວາມເຊື່ອຟັງ

ແມ່ນແຕ່ເລັກນ້ອຍຈະມີ! ພາລະກິດຂອງພຣະເຈົ້າບໍ່ແມ່ນສິ່ງທີ່ຈະຮັບໄດ້ຢ່າງງ່າຍໂດຍມະນຸດ. ເຖິງວ່າມະນຸດຈະໃຊ້ກຳລັງທັງໝົດທີ່ພວກເຂົາມີຢູ່ ແຕ່ພວກເຂົາກໍຈະໄດ້ຮັບພຽງສ່ວນນ້ອຍ ເຊິ່ງໃນທີ່ສຸດແລ້ວກໍຈະເຮັດໃຫ້ພວກເຂົາຖືກເຮັດໃຫ້ສົມບູນ. ແລ້ວຜູ້ທີ່ເປັນລູກຂອງທູດສະຫວັນ ທີ່ພະຍາຍາມທຳລາຍພາລະກິດຂອງພຣະເຈົ້າເດ? ພວກເຂົາບໍ່ມີຄວາມຫວັງແມ່ນແຕ່ໜ້ອຍດຽວ ທີ່ຈະຖືກຮັບເອົາໂດຍພຣະເຈົ້າເລີຍແມ່ນບໍ? ຈຸດປະສົງຂອງເຮົາໃນການປະຕິບັດພາລະກິດແຫ່ງການເອົາຊະນະບໍ່ແມ່ນພຽງເພື່ອເອົາຊະນະເພື່ອໃຫ້ໄດ້ໄຊຊະນະເທົ່ານັ້ນ, ແຕ່ເປັນການເອົາຊະນະເພື່ອເປີດເຜີຍຄວາມຊອບທຳ ແລະ ຄວາມບໍ່ຊອບທຳ ເພື່ອໃຫ້ໄດ້ຫຼັກຖານສຳລັບການລົງໂທດມະນຸດ, ເພື່ອປະນາມຄົນຊົ່ວ ແລະ ຍິ່ງກວ່ານັ້ນແມ່ນການເອົາຊະນະເພື່ອເຮັດໃຫ້ຄົນທີ່ເຕັມໃຈເຊື່ອຟັງສົມບູນ. ໃນທີ່ສຸດ, ທຸກຄົນຈະຖືກແຍກອອກໄປຕາມປະເພດ ແລະ ຄົນທີ່ຖືກເຮັດໃຫ້ສົມບູນຈະມີຄວາມຄິດ ແລະ ແນວຄວາມຄິດທີ່ເຕັມໄປດ້ວຍການເຊື່ອຟັງ. ນີ້ຄືພາລະກິດທີ່ຕ້ອງເຮັດໃຫ້ສຳເລັດໃນຍຸກທີ່ສຸດ. ໃນຂະນະດຽວກັນນັ້ນ, ຜູ້ທີ່ມີທຸກການກະທຳທີ່ກະບົດຈະຖືກລົງໂທດ ແລະ ຖືກສົ່ງໄປເຜົາໃນກອງໄຟ ເຊິ່ງເປັນວັດຖຸແຫ່ງການສາບແຊ່ງຕະຫຼອດການ. ເມື່ອເວລານັ້ນມາເຖິງ, ຜູ້ທີ່ເປັນ “ວິລະບູລຸດທີ່ຍິ່ງໃຫຍ່ ແລະ ບໍ່ເຄີຍພ່າຍແພ້” ໃນອະດີດຜ່ານມາຈະກາຍເປັນ “ຄົນຂີ້ຢ້ານທີ່ອ່ອນແອ ແລະ ໄຮ້ສະມັດຕະພາບ” ທີ່ຕໍ່າຊ້າ ແລະ ຖືກຫຼົບຫຼີກທີ່ສຸດ. ມີພຽງສິ່ງນີ້ເທົ່ານັ້ນທີ່ສາມາດສະແດງເຖິງຄວາມທ່ຽງທຳຂອງພຣະເຈົ້າ ແລະ ອຸປະນິໄສຂອງພຣະອົງໃນທຸກແງ່ມຸມ ທີ່ມະນຸດບໍ່ສາມາດລ່ວງເກີນໄດ້ ແລະ ມີພຽງສິ່ງນີ້ເທົ່ານັ້ນທີ່ຈະຢຸດຄວາມກຽດຊັງໃນຈິດໃຈຂອງເຮົາ. ພວກເຈົ້າເຫັນດີນຳບໍວ່າ ນີ້ສົມເຫດສົມຜົນທີ່ສຸດ?

ບໍ່ແມ່ນທຸກຄົນທີ່ມີປະສົບການກັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ບໍ່ແມ່ນຜູ້ທີ່ຢູ່ໃນກະແສນີ້ຈະໄດ້ຮັບຊີວິດ. ຊີວິດບໍ່ແມ່ນຊັບສົມບັດລວມ ທີ່ມະນຸດທຸກຄົນໃຊ້ຮ່ວມກັນ ແລະ ການປ່ຽນແປງໃນອຸປະນິໄສກໍບໍ່ແມ່ນສິ່ງທີ່ຈະບັນລຸໄດ້ຢ່າງງ່າຍດາຍໂດຍທຸກຄົນ. ການອ່ອນນ້ອມຕໍ່ພາລະກິດຂອງພຣະເຈົ້າຕ້ອງເປັນຈິງ ແລະ ຕ້ອງມີການດຳລົງຢູ່. ການອ່ອນນ້ອມແບບຜິວເຜີນຈະບໍ່ສາມາດໄດ້ຮັບການຍົກຍ້ອງຈາກພຣະເຈົ້າ ແລະ ການເຊື່ອຟັງພຽງດ້ານຜິວເຜີນຂອງພຣະທຳຂອງພຣະເຈົ້າ ໂດຍທີ່ປາສະຈາກການສະແຫວງຫາຄວາມປ່ຽນແປງຈິດໃຈຕົນເອງນັ້ນບໍ່ແມ່ນການສະແຫວງຫາຈິດໃຈຂອງພຣະເຈົ້າ. ການເຊື່ອຟັງພຣະເຈົ້າ ແລະ ການອ່ອນນ້ອມຕໍ່ພາລະກິດຂອງພຣະເຈົ້າແມ່ນອັນໜຶ່ງອັນດຽວກັນ. ຜູ້ທີ່ອ່ອນນ້ອມຕໍ່ພຣະເຈົ້າເທົ່ານັ້ນ ແຕ່ບໍ່ອ່ອນນ້ອມຕໍ່ພາລະກິດແມ່ນບໍ່ສາມາດຖືວ່າເປັນຜູ້ທີ່ເຊື່ອຟັງ ແລ້ວແຮງໄກສຳລັບຜູ້ທີ່ບໍ່ອ່ອນນ້ອມຢ່າງແທ້ຈິງ ແຕ່ເປັນຄົນໜ້າຊື່ໃຈຄົດ. ຜູ້ທີ່ອ່ອນນ້ອມຕໍ່ພຣະເຈົ້າຢ່າງແທ້ຈິງຈະສາມາດໄດ້ຮັບຜົນຈາກພາລະກິດ ແລະ ບັນລຸຄວາມເຂົ້າໃຈກ່ຽວກັບອຸປະນິໄສ ແລະ ພາລະກິດຂອງພຣະເຈົ້າ. ມີແຕ່ຜູ້ຄົນດັ່ງກ່າວທີ່ອ່ອນນ້ອມຕໍ່ພຣະເຈົ້າຢ່າງແທ້ຈິງ. ຜູ້ຄົນເຫຼົ່ານັ້ນສາມາດໄດ້ຮັບຄວາມຮູ້ໃໝ່ ແລະ ປະສົບກັບການປ່ຽນແປງໃໝ່ຈາກພາລະກິດໃໝ່. ມີແຕ່ຜູ້ຄົນເຫຼົ່ານີ້ເທົ່ານັ້ນທີ່ໄດ້ຮັບການຍົກຍ້ອງຈາກພຣະເຈົ້າ ແລະ ມີແຕ່ຜູ້ຄົນເຫຼົ່ານີ້ເທົ່ານັ້ນທີ່ຖືກເຮັດໃຫ້ສົມບູນ ແລະ ມີແຕ່ຄົນເຫຼົ່ານີ້ເທົ່ານັ້ນທີ່ແມ່ນຜູ້ໄດ້ຮັບການປ່ຽນແປງຈິດໃຈ. ຜູ້ທີ່ໄດ້ຮັບການຍົກຍ້ອງຈາກພຣະເຈົ້າແມ່ນຜູ້ທີ່ອ່ອນນ້ອມຕໍ່ພຣະເຈົ້າດ້ວຍຄວາມຍິນດີ, ພຣະທຳ ແລະ ພາລະກິດຂອງພຣະອົງ.

ມີແຕ່ຄົນປະເພດນີ້ເທົ່ານັ້ນທີ່ຢູ່ໃນຄວາມຖືກຕ້ອງ, ມີແຕ່ຄົນປະເພດນີ້ເທົ່ານັ້ນທີ່ຕ້ອງການພຣະເຈົ້າຢ່າງຈິງໃຈ ແລະ ສະແຫວງຫາພຣະເຈົ້າຢ່າງຈິງໃຈ. ສ່ວນຜູ້ທີ່ພຽງແຕ່ເວົ້າເຖິງຄວາມສັດທາໃນພຣະເຈົ້າຂອງພວກເຂົາດ້ວຍປາກຂອງພວກເຂົາ ແຕ່ໃນແກ່ນແທ້ແລ້ວພັດສາບແຊ່ງພຣະອົງ, ພວກເຂົາແມ່ນເປັນຜູ້ທີ່ໃສ່ໜ້າກາກໃຫ້ກັບຕົນເອງ ທີ່ມີພິດຂອງໂຕງູ; ພວກເຂົາເປັນຜູ້ທີ່ທໍລະຍົດທີ່ສຸດ. ບໍ່ຊ້ຳກໍໄວ, ໜ້າກາກຈອມປອມຂອງຄົນຊົ່ວເຫຼົ່ານີ້ຈະຖືກດຶງຈີກອອກ. ນີ້ບໍ່ແມ່ນພາລະກິດທີ່ຈະຕ້ອງເຮັດໃຫ້ແລ້ວໃນມື້ນີ້ບໍ? ຄົນທີ່ຊົ່ວຮ້າຍ ກໍຈະຊົ່ວຮ້າຍສະເໝີ ແລະ ຈະບໍ່ລອດພົ້ນຈາກວັນຂອງການລົງໂທດ. ຄົນດີຈະເປັນຄົນດີສະເໝີ ແລະ ຈະຖືກເປີດເຜີຍເມື່ອພາລະກິດມາຮອດຈຸດສິ້ນສຸດ. ຈະບໍ່ມີການຖືວ່າຄົນຊົ່ວຮ້າຍແມ່ນແຕ່ໜຶ່ງຄົນເປັນຄົນຊອບທຳ ແລະ ຈະບໍ່ມີການຖືວ່າຄົນທີ່ຊອບທຳແມ່ນແຕ່ໜຶ່ງຄົນເປັນຄົນຊົ່ວຮ້າຍ. ເຮົາຈະປ່ອຍໃຫ້ໃຜຜູ້ໜຶ່ງຖືກກ່າວຫາຢ່າງຜິດໆໄດ້ບໍ?

ໃນຂະນະທີ່ຊີວິດຂອງເຈົ້າພວມກ້າວໄປ, ເຈົ້າຕ້ອງມີທາງເຂົ້າໃໝ່ ແລະ ຄວາມເຂົ້າທີ່ໃໝ່ ແລະສູງສົ່ງກວ່າເກົ່າ ທີ່ເຕີບໃຫຍ່ຂຶ້ນທຸກບາດກ້າວ. ນີ້ຄືສິ່ງທີ່ມະນຸດຊາດຄວນເຂົ້າສູ່. ໂດຍຜ່ານການສົນທະນາກັນ, ການຮັບຟັງການສະແດງທຳ, ການອ່ານພຣະທຳຂອງເຈົ້າ ຫຼື ການຈັດການກັບບາງບັນຫາ, ເຈົ້າຈະໄດ້ຮັບຄວາມເຂົ້າໃຈໃໝ່ ແລະ ແສງສະຫວ່າງໃໝ່ ແລະ ຈະບໍ່ມີຊີວິດຢູ່ໃນກົດເກນເກົ່າ ແລະ ຍຸກເກົ່າ; ເຈົ້າຈະມີຊີວິດໃນແສງສະຫວ່າງໃໝ່ ແລະ ຈະບໍ່ຫຼົງອອກຈາກພຣະທຳຂອງພຣະເຈົ້າ. ນີ້ຄືສິ່ງທີ່ເອີ້ນວ່າການເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ການຈ່າຍໃຫ້ກັບບາງລະດັບທີ່ເປັນຜິວເຜີນແມ່ນໃຊ້ບໍ່ໄດ້; ແຕ່ລະມື້, ພຣະທຳຂອງພຣະເຈົ້າເຂົ້າສູ່ໂລກທີ່ສູງສົ່ງຂຶ້ນເລື້ອຍໆ ແລະ ສິ່ງໃໝ່ປາກົດຂຶ້ນທຸກວັນ ແລະ ພ້ອມນີ້ ມະນຸດກໍຕ້ອງສ້າງທາງເຂົ້າໃໝ່ເພື່ອເຂົ້າສູ່ພຣະທຳທຸກວັນ. ຕາມທີ່ພຣະເຈົ້າໄດ້ກ່າວໄວ້, ພຣະເຈົ້າຈະນຳເອົາໝາກຜົນມາສູ່ທຸກສິ່ງທີ່ພຣະອົງໄດ້ກ່າວໄວ້ ແລະ ຖ້າເຈົ້າບໍ່ສາມາດນຳທັນ ເຈົ້າກໍ່ຈະຖືກປະຖິ້ມໄວ້ດ້ານຫຼັງ. ເຈົ້າຕ້ອງລົງເລິກໃນການອະທິຖານຂອງເຈົ້າ; ການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າຕ້ອງບໍ່ຂາດວັດຂາດຕອນ. ໃຫ້ລົງເລິກໃນແສງສະຫວ່າງ ແລະ ແສງເຍືອງທາງທີ່ເຈົ້າໄດ້ຮັບ ແລະ ແນວຄິດ ແລະ ການຈິນຕະນາການຂອງເຈົ້າຕ້ອງຫຼຸດລົງເທື່ອລະໜ້ອຍ. ເຈົ້າຕ້ອງເຮັດໃຫ້ການຕັດສິນຂອງເຈົ້າໜັກແໜ້ນຂຶ້ນ ແລະ ບໍ່ວ່າເຈົ້າຈະຜະເຊີນກັບຫຍັງກໍຕາມ ເຈົ້າຕ້ອງມີຄວາມຄິດເປັນຂອງຕົວເອງກ່ຽວກັບສິ່ງນີ້ ແລະ ມີມຸມມອງເປັນຂອງຕົວເອງ. ໃນການເຂົ້າໃຈບາງສິ່ງໃນຈິດວິນຍານ, ເຈົ້າຕ້ອງໄດ້ຮັບຄວາມເຂົ້າໃຈອັນເລິກເຊິ່ງຕໍ່ສິ່ງທີ່ຢູ່ພາຍນອກ ແລະ ເຂົ້າໃຈແກ່ນແທ້ຂອງບັນຫາໃດໜຶ່ງ. ຖ້າເຈົ້າບໍ່ກຽມພ້ອມກັບສິ່ງເຫຼົ່ານີ້, ເຈົ້າຈະສາມາດນຳພາຄຣິສຕະຈັກໄດ້ແນວໃດ? ຖ້າເຈົ້າເວົ້າຕາມໂຕ ແລະ ທິດສະດີ ໂດຍປາສະຈາກຄວາມເປັນຈິງໃດໆ ແລະ ປາສະຈາກວິທີປະຕິບັດ, ເຈົ້າຈະສາມາດຢູ່ໄດ້ພຽງໄລຍະເວລາສັ້ນເທົ່ານັ້ນ. ອາດເປັນທີ່ຍອມຮັບໄດ້ເລັກນ້ອຍເມື່ອເວົ້າກັບຜູ້ເຊື່ອໃໝ່ ແຕ່ພາຍຫຼັງເວລາໃດໜຶ່ງ ເມື່ອຜູ້ເຊື່ອໃໝ່ໄດ້ຮັບປະສົບການຕົວຈິງ, ເຈົ້າກໍຈະບໍ່ສາມາດສະໜອງໃຫ້ພວກເຂົາໄດ້ອີກ. ແລ້ວເຈົ້າຈະເໝາະຕໍ່ການຮັບໃຊ້ພຣະເຈົ້າໄດ້ແນວໃດ? ຖ້າປາສະຈາກແສງສະຫວ່າງໃໝ່, ເຈົ້າຈະບໍ່ສາມາດເຮັດພາລະກິດໄດ້. ຜູ້ທີ່ບໍ່ມີແສງສະຫວ່າງໃໝ່ແມ່ນຜູ້ທີ່ບໍ່ຮູ້ວິທີທີ່ຈະໄດ້ຮັບປະສົບການ ແລະ ຜູ້ຄົນເຫຼົ່ານັ້ນຈະບໍ່ມີວັນໄດ້ຮັບຄວາມຮູ້ ຫຼື ປະສົບການໃໝ່ໄດ້. ໃນ

ເລື່ອງຂອງການສະໜອງຊີວິດ, ພວກເຂົາຈະບໍ່ມີວັນສາມາດປະຕິບັດໜ້າທີ່ຂອງຕົນໄດ້ ແລະ ພວກເຂົາຈະບໍ່ສາມາດກາຍເປັນຜູ້ທີ່ເໝາະສົມສຳລັບການນຳໃຊ້ຂອງພຣະເຈົ້າ. ມະນຸດປະເພດນີ້ບໍ່ມີຫຍັງດີເລີຍນອກຈາກເປັນພຽງຄົນໄຮ້ປະໂຫຍດ. ຄວາມຈິງກໍຄື ຜູ້ຄົນດັ່ງກ່າວບໍ່ມີຄວາມສາມາດໃນການປະຕິບັດໜ້າທີ່ຂອງຕົນໃນພາລະກິດຢ່າງສິ້ນເຊີງ ແລະ ພວກເຂົາທຸກຄົນບໍ່ມີດີຫຍັງເລີຍ. ບໍ່ພຽງແຕ່ພວກເຂົາລົ້ມເຫຼວໃນການປະຕິບັດໜ້າທີ່ຂອງພວກເຂົາເທົ່ານັ້ນ ແຕ່ພວກເຂົາຍັງນຳເອົາຄວາມເຄັ່ງຕຶງທີ່ບໍ່ຈຳເປັນມາສູ່ຄຣິສຕະຈັກອີກດ້ວຍ. ເຮົາຂໍເຕືອນ "ຊາຍຊະລາຜູ້ໜ້າເຄົາລົບ" ເຫຼົ່ານີ້ໃຫ້ຮີບຮ້ອນອອກຈາກຄຣິສຕະຈັກ ເພື່ອວ່າຄົນອື່ນຈະບໍ່ຕ້ອງແນມເບິ່ງເຈົ້າອີກຕໍ່ໄປ. ຜູ້ຄົນດັ່ງກ່າວບໍ່ເຂົ້າໃຈພາລະກິດໃໝ່ ແລະ ເຕັມໄປດ້ວຍແນວຄວາມຄິດທີ່ບໍ່ຮູ້ຈົບ. ພວກເຂົາບໍ່ມີປະໂຫຍດຫຍັງທັງສິ້ນຕໍ່ຄຣິສຕະຈັກ; ກົງກັນຂ້າມ, ພວກເຂົາກໍ່ຄວາມເສຍຫາຍ ແລະ ແຜ່ລາມຄວາມບໍ່ດີໄປທົ່ວທຸກບ່ອນ ຈົນເຖິງຂັ້ນຮ່ວມປະພຶດຜິດໃນທຸກຮູບແບບ ແລະ ກໍ່ຄວາມວຸ້ນວາຍໃນຄຣິສຕະຈັກ ເຊິ່ງເຮັດໃຫ້ຜູ້ທີ່ບໍ່ມີການຈຳແນກມີຄວາມສັບສົນ ແລະ ແຕກຕື່ນ. ຜີສາດຮ້າຍທີ່ມີຊີວິດເຫຼົ່ານີ້ ແລະ ວິນຍານຊົ່ວຊ້າເຫຼົ່ານີ້ຄວນອອກໄປຈາກຄຣິສຕະຈັກໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອບໍ່ໃຫ້ຄຣິສຕະຈັກຖືກທຳລາຍລົງດ້ວຍນໍ້າມືຂອງເຈົ້າ. ເຈົ້າອາດບໍ່ຢ້ານກົວພາລະກິດໃນວັນນີ້ ແຕ່ວ່າ ເຈົ້າບໍ່ຢ້ານການລົງໂທດທີ່ຊອບທຳຂອງມື້ອື່ນບໍ່? ມີຜູ້ຄົນຈຳນວນຫຼາຍໃນຄຣິສຕະຈັກທີ່ເອົາປຽບຄົນອື່ນ ແລະ ມີໝາປ່າຈຳນວນຫຼວງຫຼາຍທີ່ຕ້ອງການຂັດຂວາງພາລະກິດປົກກະຕິຂອງພຣະເຈົ້າ. ສິ່ງເຫຼົ່ານີ້ລ້ວນແຕ່ແມ່ນຜີສາດທີ່ຖືກສົ່ງມາໂດຍພະຍາມານ ກໍຄືໝາປ່າທີ່ຊົ່ວຮ້າຍ ທີ່ພະຍາຍາມກິນລູກແກະທີ່ບໍ່ຮູ້ຈັກຫຍັງ. ຖ້າຫາກຜູ້ທີ່ຖືກເອີ້ນວ່າມະນຸດເຫຼົ່ານີ້ບໍ່ຖືກຂັບໄລ່ໃຫ້ອອກໄປ, ພວກເຂົາຈະກາຍເປັນແມ່ພະຍາດໃນຄຣິສຕະຈັກ ແລະ ເປັນແມງເມົ່າທີ່ກິນເຄື່ອງຖວາຍ. ບໍ່ໄວກໍຊ້າ, ໂຕໜອນທີ່ໜ້າລັງກຽດ, ໂງ່ຈ້າ, ຕໍ່າຊ້າ ແລະ ທີ່ເປັນຕາອະເຫຍືອງເຫຼົ່ານີ້ຈະຖືກລົງໂທດໃນມື້ໜຶ່ງ!

# ຍຸກແຫ່ງລາຊະອານາຈັກແມ່ນຍຸກແຫ່ງພຣະທຳ

ໃນຍຸກແຫ່ງລາຊະອານາຈັກ ພຣະເຈົ້າໃຊ້ພຣະທຳເພື່ອນຳໄປສູ່ຍຸກໃໝ່, ປ່ຽນແປງວິທີປະຕິບັດພາລະກິດຂອງພຣະອົງ ແລະ ປະຕິບັດພາລະກິດຂອງຍຸກທັງໝົດ. ນີ້ແມ່ນຫຼັກການທີ່ພຣະເຈົ້າປະຕິບັດພາລະກິດໃນຍຸກແຫ່ງພຣະທຳ. ພຣະອົງກາຍມາເປັນເນື້ອໜັງເພື່ອກ່າວຈາກມຸມມອງທີ່ແຕກຕ່າງກັນ ເພື່ອວ່າມະນຸດຈະສາມາດເຫັນພຣະເຈົ້າຢ່າງແທ້ຈິງ ເຊິ່ງເປັນພຣະທຳທີ່ປາກົດໃນເນື້ອໜັງ ແລະ ສາມາດເບິ່ງເຫັນສະຕິປັນຍາ ແລະ ຄວາມອັດສະຈັນຂອງພຣະອົງ. ພາລະກິດດັ່ງກ່າວແມ່ນຖືກປະຕິບັດເພື່ອບັນລຸເປົ້າໝາຍຂອງການເອົາຊະນະມະນຸດໄດ້ດີຂຶ້ນ, ເຮັດໃຫ້ມະນຸດສົມບູນແບບ ແລະ ກຳຈັດມະນຸດ ເຊິ່ງເປັນຄວາມໝາຍທີ່ແທ້ຈິງຂອງການໃຊ້ພຣະທຳເພື່ອດຳເນີນພາລະກິດໃນຍຸກແຫ່ງພຣະທຳ. ຜ່ານພຣະທຳເຫຼົ່ານີ້, ຜູ້ຄົນມາຮູ້ຈັກພາລະກິດຂອງພຣະເຈົ້າ, ອຸປະນິໄສຂອງພຣະເຈົ້າ, ທາດແທ້ຂອງມະນຸດ ແລະ ສິ່ງທີ່ມະນຸດຄວນເຂົ້າເຮັດ. ຜ່ານພຣະທຳ, ພາລະກິດທີ່ພຣະເຈົ້າຕ້ອງການເຮັດໃນຍຸກແຫ່ງພຣະທຳຈະເກີດຜົນຢ່າງສົມບູນ. ຜ່ານພຣະທຳເຫຼົ່ານີ້, ຜູ້ຄົນຈະຖືກເປີດເຜີຍ, ກຳຈັດ ແລະ ທົດລອງ. ຜູ້ຄົນໄດ້ເຫັນພຣະທຳຂອງພຣະເຈົ້າ, ໄດ້ຍິນພຣະທຳເຫຼົ່ານີ້ ແລະ ຮັບຮູ້ວ່າການມີຢູ່ຈິງຂອງພຣະທຳເຫຼົ່ານີ້. ຜົນຕາມມາກໍ່ຄື ພວກເຂົາໄດ້ມາເຊື່ອໃນການມີຢູ່ຈິງຂອງພຣະເຈົ້າ, ໃນລິດອຳນາດທີ່ຍິ່ງໃຫຍ່ ແລະ ສະຕິປັນຍາຂອງພຣະເຈົ້າ ພ້ອມທັງໃນຄວາມຮັກທີ່ພຣະອົງມີຕໍ່ມະນຸດ ແລະ ຄວາມປາຖະໜາຂອງພຣະອົງເພື່ອຊ່ວຍໃຫ້ມະນຸດລອດພົ້ນ. ຄຳວ່າ "ພຣະທຳ" ອາດເປັນສິ່ງທີ່ງ່າຍດາຍ ແລະ ທຳມະດາ, ແຕ່ພຣະທຳທີ່ອອກຈາກປາກຂອງພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ສັ່ນສະເທືອນຈັກກະວານ, ພວກມັນປ່ຽນຫົວໃຈຂອງຜູ້ຄົນ, ປ່ຽນແປງແນວຄິດ ແລະ ອຸປະນິໄສເດີມຂອງພວກເຂົາ ແລະ ປ່ຽນແປງລັກສະນະທີ່ໂລກທັງປວງເຄີຍເປັນ. ຕະຫຼອດຍຸກຕ່າງໆ, ມີພຽງແຕ່ພຣະເຈົ້າໃນປັດຈຸບັນທີ່ປະຕິບັດພາລະກິດໃນລັກສະນະນີ້ ແລະ ມີພຽງແຕ່ພຣະອົງທີ່ກ່າວແບບນີ້ ແລະ ມາຊ່ວຍມະນຸດໃຫ້ລອດພົ້ນແບບນີ້. ນັບຕັ້ງແຕ່ນີ້ຕໍ່ໄປ ມະນຸດຈະດຳລົງຊີວິດຢູ່ພາຍໃຕ້ການຊີ້ນຳຈາກພຣະທຳຂອງພຣະເຈົ້າ, ໄດ້ຮັບການລ້ຽງດູ ແລະ ການສະໜອງໂດຍພຣະທຳຂອງພຣະອົງ. ຜູ້ຄົນດຳລົງຊີວິດຢູ່ໃນໂລກແຫ່ງພຣະທຳຂອງພຣະເຈົ້າ, ທ່າມກາງຄຳສາບແຊ່ງ ແລະ ພອນຈາກພຣະທຳຂອງພຣະເຈົ້າ ແລະ ເຖິງກັບມີອີກຫຼາຍຄົນທີ່ມາດຳລົງຊີວິດຢູ່ພາຍໃຕ້ການພິພາກສາ ແລະ ການຕີສອນຈາກພຣະທຳຂອງພຣະອົງ. ພຣະທຳເຫຼົ່ານີ້ ແລະ ພາລະກິດນີ້ແມ່ນລ້ວນແລ້ວແຕ່ເຫັນແກ່ຄວາມລອດພົ້ນຂອງມະນຸດ, ເຫັນແກ່ການສຳເລັດຕາມຄວາມປະສົງຂອງພຣະເຈົ້າ ແລະ ເຫັນແກ່ການປ່ຽນແປງພາບລັກເດີມຂອງໂລກແຫ່ງການສ້າງ. ພຣະເຈົ້າເນລະມິດສ້າງໂລກໂດຍໃຊ້ພຣະທຳ, ພຣະອົງນຳພາມະນຸດທົ່ວຈັກກະວານໂດຍໃຊ້ພຣະທຳ ແລະ ພຣະອົງເອົາຊະນະ ແລະ ຊ່ວຍພວກເຂົາໃຫ້ລອດພົ້ນໂດຍໃຊ້ພຣະທຳ. ໃນທີ່ສຸດແລ້ວ, ພຣະອົງກໍ່ຈະໃຊ້ພຣະທຳນຳໂລກເດີມທັງປວງໄປສູ່ຈຸດສິ້ນສຸດ, ແລ້ວສຳເລັດແຜນການຄຸ້ມຄອງທັງໝົດຂອງພຣະອົງ. ຕະຫຼອດຍຸກແຫ່ງລາຊະອານາຈັກ ພຣະເຈົ້າໃຊ້ພຣະທຳເພື່ອປະຕິບັດພາລະກິດຂອງພຣະອົງ ແລະ ບັນລຸຜົນໃນພາລະກິດຂອງພຣະອົງ. ພຣະອົງບໍ່ໄດ້ເຮັດສິ່ງອັດຈະຈັນ ຫຼື ສະແດງ

ປະຕິຫານ, ພຽງແຕ່ເຮັດພາລະກິດຂອງພຣະອົງຜ່ານພຣະທຳເທົ່ານັ້ນ. ຍ້ອນພຣະທຳເຫຼົ່ານີ້, ມະນຸດຈຶ່ງໄດ້ຮັບການລໍ້ລ້ຽງ ແລະ ການສະໜອງ ແລະ ຮັບຄວາມຮູ້ ແລະ ປະສົບການທີ່ແທ້ຈິງ. ໃນຍຸກແຫ່ງພຣະທຳ, ມະນຸດໄດ້ຮັບພອນເປັນພິເສດ. ເຂົາບໍ່ໄດ້ທົນທຸກກັບຄວາມເຈັບປວດຂອງຮ່າງກາຍ ແລະ ພຽງແຕ່ມີຄວາມສຸກກັບການສະໜອງຢ່າງອຸດົມສົມບູນຈາກພຣະທຳຂອງພຣະເຈົ້າ; ໂດຍບໍ່ຈຳເປັນຕ້ອງສະແຫວງຫາຢ່າງຕາບອດ ຫຼື ອອກເດີນທາງຄົ້ນຫາຢ່າງຕາບອດ ເຂົາສາມາດເຫັນການປາກົດຕົວຂອງພຣະເຈົ້າ, ໄດ້ຍິນຂອງພຣະອົງກ່າວດ້ວຍປາກຂອງພຣະອົງເອງ, ໄດ້ຮັບເອົາສິ່ງທີ່ພຣະອົງປະທານໃຫ້ ແລະ ເຝົ້າເບິ່ງພຣະອົງທີ່ກຳລັງເຮັດພາລະກິດຂອງພຣະອົງດ້ວຍພຣະອົງເອງທ່າມກາງຄວາມສຸກສະບາຍຂອງເຂົາ. ສິ່ງເຫຼົ່ານີ້ຄືສິ່ງທີ່ມະນຸດໃນຍຸກທີ່ຜ່ານມາບໍ່ສາມາດຊື່ນຊົມໄດ້ ແລະ ພວກມັນເປັນພອນທີ່ພວກເຂົາບໍ່ສາມາດໄດ້ຮັບຈັກເທື່ອ.

ພຣະເຈົ້າຕັ້ງໃຈເຮັດໃຫ້ມະນຸດສົມບູນແບບ. ບໍ່ວ່າພຣະອົງຈະກ່າວຈາກມຸມມອງໃດກໍ່ຕາມ, ທັງໝົດກໍ່ເພື່ອເຫັນແກ່ການເຮັດໃຫ້ຜູ້ຄົນສົມບູນແບບ. ພຣະທຳທີ່ກ່າວຈາກມຸມມອງຂອງພຣະວິນຍານກໍ່ຍາກທີ່ຜູ້ຄົນຈະເຂົ້າໃຈ; ພວກເຂົາບໍ່ມີທາງຄົ້ນພົບເສັ້ນທາງໃນການປະຕິບັດ, ຍ້ອນສັກກະຍາພາບຂອງພວກເຂົາສຳລັບຄວາມເຂົ້າໃຈແມ່ນມີຄວາມຈຳກັດ. ພາລະກິດຂອງພຣະເຈົ້າບັນລຸຜົນທີ່ແຕກຕ່າງກັນ ແລະ ພຣະອົງມີເປົ້າໝາຍໃນການປະຕິບັດພາລະກິດແຕ່ລະຂັ້ນຕອນຂອງພຣະອົງ. ຍິ່ງໄປກວ່ານັ້ນ, ພຣະອົງຈຳເປັນຕ້ອງກ່າວຈາກມຸມມອງທີ່ແຕກຕ່າງກັນ ຍ້ອນໂດຍການເຮັດແບບນັ້ນເທົ່ານັ້ນ ພຣະອົງຈຶ່ງສາມາດເຮັດໃຫ້ມະນຸດສົມບູນແບບໄດ້. ຖ້າພຣະອົງພຽງແຕ່ເປັ່ງສຽງຂອງພຣະອົງກ່າວຈາກມຸມມອງຂອງພຣະວິນຍານເທົ່ານັ້ນ, ມັນກໍ່ຈະບໍ່ມີທາງທີ່ຈະສຳເລັດຂັ້ນຕອນນີ້ໃນພາລະກິດຂອງພຣະອົງ. ຈາກນໍ້າສຽງທີ່ພຣະອົງກ່າວ, ເຈົ້າສາມາດເຫັນໄດ້ວ່າ ພຣະອົງຕັ້ງໃຈທີ່ຈະສ້າງໃຫ້ຄົນກຸ່ມນີ້ສົມບູນແບບ. ສະນັ້ນ ແມ່ນຫຍັງຄວນເປັນບາດກ້າວທຳອິດສຳລັບແຕ່ລະຄົນທີ່ປາຖະໜາຖືກເຮັດໃຫ້ສົມບູນ? ນອກເໜືອສິ່ງອື່ນໃດ, ເຈົ້າຕ້ອງຮູ້ຈັກພາລະກິດຂອງພຣະເຈົ້າ. ມື້ນີ້, ວິທີການໄດ້ເລີ່ມຕົ້ນຂຶ້ນໃນພາລະກິດຂອງພຣະເຈົ້າ; ຍຸກສະໄໝໄດ້ປ່ຽນແປງໄປ, ລັກສະນະທີ່ພຣະເຈົ້າປະຕິບັດພາລະກິດກໍ່ປ່ຽນໄປເຊັ່ນກັນ ແລະ ວິທີການທີ່ພຣະອົງກ່າວກໍ່ແຕກຕ່າງກັນ. ມື້ນີ້ ບໍ່ແມ່ນພຽງແຕ່ວ່າວິທີການໃນພາລະກິດຂອງພຣະອົງໄດ້ປ່ຽນແປງໄປເທົ່ານັ້ນ, ແຕ່ຍຸກກໍ່ໄດ້ປ່ຽນແປງເຊັ່ນກັນ. ຕອນນີ້ແມ່ນຍຸກແຫ່ງລາຊະອານາຈັກ. ມັນຍັງເປັນຍຸກແຫ່ງການຮັກພຣະເຈົ້າ. ມັນຄືການຊົມລົດຊາດລ່ວງໜ້າຂອງຍຸກແຫ່ງອານາຈັກພັນປີ ເຊິ່ງຍັງເປັນຍຸກແຫ່ງພຣະທຳອີກດ້ວຍ ແລະ ເປັນຍຸກທີ່ພຣະເຈົ້າໃຊ້ຫຼາຍວິທີໃນການກ່າວເພື່ອເຮັດໃຫ້ມະນຸດສົມບູນ ແລະ ກ່າວຈາກມຸມມອງທີ່ແຕກຕ່າງກັນເພື່ອສະໜອງໃຫ້ແກ່ມະນຸດ. ເມື່ອໄດ້ກ້າວເຂົ້າຍຸກແຫ່ງອານາຈັກພັນປີ, ພຣະເຈົ້າກໍ່ຈະເລີ່ມໃຊ້ພຣະທຳເພື່ອເຮັດໃຫ້ມະນຸດສົມບູນແບບ, ເຮັດໃຫ້ມະນຸດສາມາດເຂົ້າສູ່ຄວາມເປັນຈິງໃນຊີວິດ ແລະ ນຳພາມະນຸດໄປສູ່ເສັ້ນທາງທີ່ຖືກຕ້ອງ. ເມື່ອໄດ້ປະສົບກັບຫຼາຍຂັ້ນຕອນໃນພາລະກິດຂອງພຣະອົງ, ມະນຸດກໍ່ໄດ້ເຫັນວ່າພາລະກິດຂອງພຣະອົງບໍ່ໄດ້ຢຸດສະງັກ, ແຕ່ກຳລັງວິວັດທະນາການ ແລະ ລົງເລິກຢ່າງຕໍ່ເນື່ອງ. ຫຼັງຈາກທີ່ຜູ້ຄົນໄດ້ຜະເຊີນກັບມັນເປັນເວລາດົນ, ພາລະກິດກໍ່ໄດ້ໝູນຊໍ້າແລ້ວຊໍ້າອີກ, ປ່ຽນແປງຄັ້ງແລ້ວຄັ້ງເລົ່າ.

ເຖິງແມ່ນວ່າມັນຈະມີການປ່ຽນແປງຫຼາຍສໍ່າໃດກໍ່ຕາມ, ມັນບໍ່ເຄີຍບ່ຽງບຽນຈາກຈຸດປະສົງຂອງພຣະເຈົ້າໃນການນໍາຄວາມລອດພົ້ນມາສູ່ມະນຸດຊາດ. ເຖິງແມ່ນວ່າຈະມີການປ່ຽນແປງສິບພັນຄັ້ງກໍ່ຕາມ, ມັນກໍບໍ່ເຄີຍຫັນເຫອອກຈາກຈຸດປະສົງເດີມຂອງມັນ. ບໍ່ວ່າວິທີການໃນພາລະກິດຂອງພຣະເຈົ້າອາດປ່ຽນແປງແນວໃດກໍ່ຕາມ, ພາລະກິດນີ້ກໍ່ບໍ່ເຄີຍອອກຈາກຄວາມຈິງ ຫຼື ຈາກຊີວິດຈັກເທື່ອ. ການປ່ຽນແປງໃນວິທີການປະຕິບັດພາລະກິດແມ່ນກ່ຽວຂ້ອງກັບການປ່ຽນແປງໃນຮູບແບບຂອງພາລະກິດ ແລະ ມຸມມອງທີ່ພຣະເຈົ້າກ່າວເທົ່ານັ້ນ; ບໍ່ມີການປ່ຽນແປງໃນຈຸດປະສົງຫຼັກໃນພາລະກິດຂອງພຣະອົງ. ການປ່ຽນແປງໃນນໍ້າສຽງຂອງພຣະອົງ ແລະ ວິທີການໃນພາລະກິດຂອງພຣະອົງເກີດຂຶ້ນເພື່ອບັນລຸຜົນ. ການປ່ຽນແປງໃນນໍ້າສຽງບໍ່ໄດ້ໝາຍຄວາມເຖິງການປ່ຽນແປງໃນຈຸດປະສົງ ຫຼື ຫຼັກການທີ່ຢູ່ເບື້ອງຫຼັງຂອງພາລະກິດ. ຜູ້ຄົນເຊື່ອໃນພຣະເຈົ້າເພື່ອການສະແຫວງຫາຊີວິດເປັນຫຼັກ; ຖ້າເຈົ້າເຊື່ອໃນພຣະເຈົ້າ ແຕ່ບໍ່ສະແຫວງຫາຊີວິດ ຫຼື ຄົ້ນຫາຄວາມຈິງ ຫຼື ຄວາມຮູ້ກ່ຽວກັບພຣະເຈົ້າ, ແລ້ວນີ້ກໍ່ບໍ່ແມ່ນຄວາມເຊື່ອໃນພຣະເຈົ້າ! ແລ້ວມັນເປັນຈິງບໍທີ່ຈະຍັງສະແຫວງຫາເພື່ອເຂົ້າສູ່ອານາຈັກເພື່ອເປັນກະສັດ? ການບັນລຸຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າຜ່ານການສະແຫວງຫາຊີວິດ, ມີພຽງແຕ່ສິ່ງນີ້ຈຶ່ງເປັນຄວາມເປັນຈິງ; ການສະແຫວງຫາ ແລະ ການປະຕິບັດຄວາມຈິງ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຄວາມເປັນຈິງ. ເມື່ອໄດ້ອ່ານພຣະທຳຂອງພຣະເຈົ້າ ແລະ ຜະເຊີນກັບພຣະທຳເຫຼົ່ານີ້, ເຈົ້າຈຶ່ງຈະເຂົ້າໃຈໃນຄວາມຮູ້ກ່ຽວກັບພຣະເຈົ້າທ່າມກາງປະສົບການຕົວຈິງ ແລະ ນີ້ແມ່ນຄວາມໝາຍຂອງການສະແຫວງຫາຢ່າງແທ້ຈິງ.

ຕອນນີ້ແມ່ນຍຸກແຫ່ງລາຊະອານາຈັກ. ບໍ່ວ່າເຈົ້າໄດ້ເຂົ້າສູ່ຍຸກໃໝ່ນີ້ ຫຼື ບໍ່ ແມ່ນຂຶ້ນຢູ່ກັບວ່າເຈົ້າໄດ້ເຂົ້າສູ່ຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ ຫຼື ບໍ່, ຂຶ້ນຢູ່ກັບວ່າ ພຣະທຳຂອງພຣະອົງໄດ້ກາຍມາເປັນຄວາມເປັນຈິງໃນຊີວິດຂອງເຈົ້າ ຫຼື ບໍ່. ພຣະທຳຂອງພຣະເຈົ້າໄດ້ຖືກເປີດເຜີຍຕໍ່ທຸກຄົນເພື່ອວ່າໃນທີ່ສຸດແລ້ວ ທຸກຄົນຈະດຳລົງຊີວິດຢູ່ໃນໂລກແຫ່ງພຣະທຳຂອງພຣະເຈົ້າ ແລະ ພຣະທຳຂອງພຣະອົງ ຈະສ່ອງແສງ ແລະ ເຍືອງທາງໃຫ້ແຕ່ລະຄົນຈາກພາຍໃນ. ໃນລະຫວ່າງເວລານີ້ ຖ້າເຈົ້າປະໝາດໃນການອ່ານພຣະທຳຂອງພຣະເຈົ້າ ແລະ ບໍ່ສົນໃຈໃນພຣະທຳຂອງພຣະອົງ, ແລ້ວນີ້ກໍ່ສະແດງວ່າ ສະພາວະຂອງເຈົ້າບໍ່ຖືກຕ້ອງ. ຖ້າເຈົ້າບໍ່ສາມາດເຂົ້າສູ່ຍຸກແຫ່ງພຣະທຳ, ແລ້ວພຣະວິນຍານບໍລິສຸດກໍ່ຈະບໍ່ປະຕິບັດພາລະກິດໃນຕົວເຈົ້າ; ຖ້າເຈົ້າໄດ້ເຂົ້າສູ່ຍຸກນີ້ແລ້ວ ພຣະອົງກໍ່ຈະປະຕິບັດພາລະກິດຂອງພຣະອົງ. ເຈົ້າສາມາດເຮັດຫຍັງໄດ້ແດ່ເມື່ອຍຸກແຫ່ງພຣະທຳໄດ້ເລີ່ມຕົ້ນຂຶ້ນ ເພື່ອຮັບເອົາພາລະກິດຂອງພຣະວິນຍານບໍລິສຸດ? ໃນຍຸກນີ້ ແລະ ໃນບັນດາພວກເຈົ້າ, ພຣະເຈົ້າຈະສຳເລັດຕາມຂໍ້ແທ້ຈິງດັ່ງຕໍ່ໄປນີ້: ທຸກຄົນຕ້ອງໃຊ້ຊີວິດຕາມພຣະທຳຂອງພຣະເຈົ້າ, ຕ້ອງສາມາດນຳເອົາຄວາມຈິງມາປະຕິບັດ ແລະ ຮັກພຣະເຈົ້າຢ່າງຈິງໃຈ; ການທີ່ທຸກຄົນຈະໃຊ້ພຣະທຳຂອງພຣະເຈົ້າເພື່ອເປັນພື້ນຖານ ແລະ ເປັນຄວາມເປັນຈິງຂອງພວກເຂົາ ແລະ ມີຫົວໃຈທີ່ເຄົາລົບບູຊາພຣະເຈົ້າ; ແລະ ໂດຍຜ່ານການປະຕິບັດຕາມພຣະທຳຂອງພຣະເຈົ້າ ມະນຸດຈະໄດ້ຮັບລິດອຳນາດຂອງກະສັດຮ່ວມກັບພຣະເຈົ້າ. ນີ້ແມ່ນພາລະກິດທີ່ພຣະເຈົ້າຈະບັນລຸຜົນ. ເຈົ້າສາມາດດຳເນີນຊີວິດຕໍ່ໄປໂດຍບໍ່ຕ້ອງອ່ານພຣະທຳຂອງພຣະເຈົ້າ

ບໍ? ມື້ນີ້ ມີຫຼາຍຄົນທີ່ຮູ້ສຶກວ່າ ພວກເຂົາຈະບໍ່ສາມາດດຳເນີນຊີວິດຕໍ່ໄປໄດ້ແມ່ນແຕ່ໜຶ່ງມື້ ຫຼື ສອງມື້ ຖ້າບໍ່ໄດ້ອ່ານພຣະທຳຂອງພຣະອົງ. ພວກເຂົາຕ້ອງອ່ານພຣະທຳຂອງພຣະອົງທຸກມື້ ແລະ ຖ້າເວລາບໍ່ເອື້ອອຳນວຍ, ການຟັງພຣະທຳເຫຼົ່ານັ້ນກໍ່ພຽງພໍແລ້ວ. ນີ້ແມ່ນຄວາມຮູ້ສຶກທີ່ພຣະວິນຍານບໍລິສຸດມອບໃຫ້ຜູ້ຄົນ ແລະ ມັນເປັນວິທີທີ່ພຣະອົງເລີ່ມຕົ້ນດົນບັນດານພວກເຂົາ. ນັ້ນກໍ່ຄື ພຣະອົງປົກຄອງຜູ້ຄົນຜ່ານພຣະທຳ ເພື່ອວ່າມະນຸດຈະສາມາດເຂົ້າສູ່ຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ. ຫຼັງຈາກພຽງແຕ່ມື້ດຽວທີ່ບໍ່ໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຖ້າເຈົ້າຮູ້ສຶກມືດມົວ ແລະ ຫິວກະຫາຍ ແລະ ບໍ່ສາມາດທົນໄດ້, ນີ້ກໍ່ສະແດງວ່າເຈົ້າຖືກດົນໃຈໂດຍພຣະວິນຍານບໍລິສຸດ ແລະ ພຣະອົງບໍ່ໄດ້ຫັນໜີຈາກເຈົ້າເລີຍ. ສະນັ້ນ ເຈົ້າຄືຄົນໜຶ່ງທີ່ຢູ່ໃນກະແສນີ້. ເຖິງຢ່າງໃດກໍຕາມ, ຫຼັງໜຶ່ງ ຫຼື ສອງມື້ທີ່ບໍ່ໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ຖ້າເຈົ້າບໍ່ຮູ້ສຶກຫຍັງເລີຍ ແລະ ຖ້າເຈົ້າບໍ່ໄດ້ຫິວກະຫາຍ ແລະ ບໍ່ຖືກດົນບັນດານຫຍັງເລີຍ, ສິ່ງນີ້ກໍ່ສະແດງວ່າພຣະວິນຍານບໍລິສຸດໄດ້ຫັນໜີຈາກເຈົ້າແລ້ວ. ແລ້ວນີ້ກໍ່ໝາຍຄວາມວ່າ ມີບາງສິ່ງທີ່ບໍ່ຖືກຕ້ອງກັບສະພາວະພາຍໃນຂອງເຈົ້າ; ເຈົ້າບໍ່ໄດ້ເຂົ້າສູ່ຍຸກແຫ່ງພຣະທຳ ແລະ ເຈົ້າເປັນໜຶ່ງໃນຄົນທີ່ຖືກປະໄວ້ຂ້າງຫຼັງ. ພຣະເຈົ້າໃຊ້ພຣະທຳເພື່ອປົກຄອງຜູ້ຄົນ; ເຈົ້າຮູ້ສຶກດີ ຖ້າເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ຖ້າເຈົ້າບໍ່ເຮັດແບບນັ້ນ ເຈົ້າກໍ່ຈະບໍ່ມີເສັ້ນທາງທີ່ຈະເດີນຕາມ. ພຣະທຳຂອງພຣະເຈົ້າໄດ້ກາຍມາເປັນອາຫານຂອງຜູ້ຄົນ ແລະ ພະລັງທີ່ຂັບເຄື່ອນພວກເຂົາ. ພຣະຄຳພີໄດ້ກ່າວໄວ້ວ່າ “ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານຢ່າງດຽວ ແຕ່ດ້ວຍພຣະທຳທຸກຂໍ້ທີ່ອອກມາຈາກປາກຂອງພຣະເຈົ້າ” (ມັດທາຍ 4:4). ມື້ນີ້, ພຣະເຈົ້າຈະເຮັດໃຫ້ພາລະກິດນີ້ສຳເລັດ ແລະ ພຣະອົງຈະສຳເລັດຕາມຂໍ້ແທ້ຈິງໃນພວກເຈົ້າ. ມັນເປັນໄປໄດ້ແນວໃດທີ່ໃນອະດີດ ຜູ້ຄົນສາມາດດຳເນີນຊີວິດໄປຫຼາຍມື້ໂດຍບໍ່ໄດ້ອ່ານພຣະທຳຂອງພຣະເຈົ້າ ແຕ່ສາມາດກິນ ແລະ ເຮັດວຽກງານໄດ້ເປັນປົກກະຕິ, ແຕ່ສິ່ງນີ້ບໍ່ແມ່ນຄວາມຈິງໃນມື້ນີ້? ໃນຍຸກນີ້, ພຣະເຈົ້າໃຊ້ພຣະທຳເພື່ອປົກຄອງທຸກສິ່ງເປັນຫຼັກ. ມະນຸດຖືກພິພາກສາ ແລະ ຖືກເຮັດໃຫ້ສົມບູນໂດຍຜ່ານພຣະທຳຂອງພຣະເຈົ້າ, ແລ້ວໃນທີ່ສຸດກໍ່ຖືກນຳເຂົ້າສູ່ອານາຈັກ. ມີພຽງແຕ່ພຣະທຳຂອງພຣະເຈົ້າເທົ່ານັ້ນທີ່ສາມາດສະໜອງໃຫ້ແກ່ຊີວິດຂອງມະນຸດ ແລະ ມີພຽງແຕ່ພຣະທຳຂອງພຣະເຈົ້າເທົ່ານັ້ນທີ່ສາມາດມອບແສງສະຫວ່າງໃຫ້ແກ່ມະນຸດ ແລະ ເສັ້ນທາງໃຫ້ປະຕິບັດ ໂດຍສະເພາະໃນຍຸກແຫ່ງລາຊະອານາຈັກ. ຕາບໃດທີ່ເຈົ້າບໍ່ຫັນເຫຈາກຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ, ກິນ ແລະ ດື່ມພຣະທຳຂອງພຣະອົງໃນແຕ່ລະມື້, ພຣະເຈົ້າກໍ່ຈະສາມາດເຮັດໃຫ້ເຈົ້າສົມບູນໄດ້.

ການສະແຫວງຫາຊີວິດບໍ່ແມ່ນສິ່ງທີ່ສາມາດຮີບດ່ວນໄດ້; ການຈະເລີນເຕີບໂຕໃນຊີວິດບໍ່ໄດ້ເກີດຂຶ້ນໃນມື້ໜຶ່ງ ຫຼື ສອງມື້. ພາລະກິດຂອງພຣະເຈົ້າເປັນປົກກະຕິ ແລະ ເປັນຈິງ ແລະ ມີຂະບວນການທີ່ມັນຈຳເປັນຕ້ອງຜ່ານ. ພຣະເຢຊູທີ່ບັງເກີດເປັນມະນຸດໃຊ້ເວລາເຖິງສາມສິບສາມປີເຄິ່ງເພື່ອສຳເລັດພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນຂອງພຣະອົງ, ແລ້ວພາລະກິດແຫ່ງການຊຳລະລ້າງ ແລະ ການປ່ຽນແປງຊີວິດຂອງມະນຸດ, ພາລະກິດທີ່ຫຍຸ້ງຍາກທີ່ສຸດເດ? ມັນບໍ່ແມ່ນເລື່ອງງ່າຍທີ່ຈະສ້າງມະນຸດທຳມະດາຄົນໜຶ່ງສຳແດງອອກເຖິງພຣະເຈົ້າ. ໂດຍສະເພາະແມ່ນເພື່ອໃຫ້ຄົນທີ່ເກີດຊົນຊາດຂອງ

ມັງກອນແດງທີ່ຍິ່ງໃຫຍ່ ເຊິ່ງເປັນຄົນທີ່ມີຄວາມສາມາດຕໍ່າ ແລະ ຕ້ອງໄດ້ໃຊ້ເວລາດົນສຳລັບພຣະທຳ ແລະ ພາລະກິດຂອງພຣະເຈົ້າ. ສະນັ້ນຢ່າໃຈຮ້ອນຢາກເຫັນຜົນ. ເຈົ້າຕ້ອງຫ້າວຫັນໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ພະຍາຍາມຫຼາຍຂຶ້ນໃນພຣະທຳຂອງພຣະເຈົ້າ. ເມື່ອເຈົ້າອ່ານພຣະທຳຂອງພຣະອົງແລ້ວ, ເຈົ້າຕ້ອງສາມາດນຳພຣະທຳເຫຼົ່ານັ້ນເຂົ້າໃນການປະຕິບັດຕົວຈິງ, ເພີ່ມທະວີຄວາມຮູ້, ຄວາມເຂົ້າໃຈ, ການເຫັນແຈ້ງ ແລະ ສະຕິປັນຍາໃນພຣະທຳຂອງພຣະເຈົ້າ. ຜ່ານສິ່ງນີ້ ເຈົ້າຈະປ່ຽນແປງໂດຍບໍ່ຮູ້ສຶກຕົວ. ຖ້າເຈົ້າສາມາດຍຶດຖືເອົາການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າ, ການອ່ານພຣະທຳເຫຼົ່ານັ້ນ, ການຮູ້ຈັກພວກມັນ, ການມີປະສົບການກັບພວກມັນ ແລະ ການປະຕິບັດພວກມັນເປັນຫຼັກການຂອງເຈົ້າ, ເຈົ້າກໍ່ຈະເປັນຜູ້ໃຫຍ່ໂດຍບໍ່ຮູ້ສຶກຕົວ. ມີຄົນທີ່ເວົ້າວ່າ ພວກເຂົາບໍ່ສາມາດນຳພຣະທຳຂອງພຣະອົງເຂົ້າໃນການປະຕິບັດໄດ້ ແມ່ນແຕ່ຫຼັງຈາກທີ່ອ່ານພຣະທຳເຫຼົ່ານັ້ນ. ເຈົ້າຈະຟ້າວໄປໃສ? ເມື່ອເຈົ້າມີວຸດທິພາວະໃນລະດັບໃດໜຶ່ງ, ເຈົ້າກໍ່ຈະສາມາດນຳພຣະທຳຂອງພຣະອົງເຂົ້າໃນການປະຕິບັດໄດ້. ເດັກນ້ອຍທີ່ມີອາຍຸສີ່ ຫຼື ຫ້າປີຈະເວົ້າວ່າພວກເຂົາບໍ່ສາມາດສະໜັບສະໜູນ ຫຼື ໃຫ້ກຽດພໍ່ແມ່ຂອງພວກເຂົາບໍ? ເຈົ້າຄວນຮູ້ສະພາບວ່າວຸດທິພາວະໃນປັດຈຸບັນຂອງເຈົ້າມີຫຼາຍສໍ່າໃດ. ໃຫ້ນຳສິ່ງທີ່ເຈົ້າສາມາດປະຕິບັດໄປປະຕິບັດ ແລະ ຫຼີກເວັ້ນຈາກການເປັນຄົນທີ່ຂັດຂວາງການຄຸ້ມຄອງຂອງພຣະເຈົ້າ. ພຽງແຕ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ຮັບເອົາສິ່ງນັ້ນເປັນຫຼັກການນັບແຕ່ນີ້ໄປ. ຕອນນີ້ ບໍ່ຕ້ອງກັງວົນກ່ຽວກັບວ່າພຣະເຈົ້າຈະສາມາດເຮັດໃຫ້ເຈົ້າສົມບູນ ຫຼື ບໍ່. ບໍ່ຟ້າວລົງເລິກໃນເລື່ອງນັ້ນ. ພຽງແຕ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າດັ່ງທີ່ພວກມັນມາເຖິງເຈົ້າ ແລະ ພຣະເຈົ້າຈະເຮັດໃຫ້ເຈົ້າສົມບູນຢ່າງແນ່ນອນ. ເຖິງຢ່າງໃດກໍ່ຕາມ, ມີຫຼັກການທີ່ເຈົ້າຕ້ອງກິນ ແລະ ດື່ມພຣະທຳຂອງພຣະອົງ. ຢ່າເຮັດຢ່າງຫຼັບຫູຫຼັບຕາ. ໃນດ້ານໜຶ່ງ, ໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ໃຫ້ສະແຫວງຫາພຣະທຳທີ່ເຈົ້າຄວນຮູ້ຈັກ ນັ້ນກໍ່ຄື ພຣະທຳທີ່ກ່ຽວຂ້ອງກັບນິມິດ ແລະ ໃນອີກດ້ານໜຶ່ງ ໃຫ້ສະແຫວງຫາສິ່ງທີ່ເຈົ້າຄວນນຳໄປປະຕິບັດຕົວຈິງ ນັ້ນກໍ່ຄື ສິ່ງທີ່ເຈົ້າຄວນເຂົ້າປະຕິບັດ. ລັກສະນະໜຶ່ງຕ້ອງກ່ຽວຂ້ອງກັບຄວາມຮູ້ ແລະ ອີກລັກສະນະໜຶ່ງແມ່ນກ່ຽວຂ້ອງກັບການເຂົ້າປະຕິບັດ. ຫຼັງຈາກທີ່ເຈົ້າເຂົ້າໃຈທັງສອງລັກສະນະແລ້ວ, ເມື່ອເຈົ້າເຂົ້າໃຈໃນສິ່ງທີ່ເຈົ້າຄວນຮູ້ ແລະ ສິ່ງທີ່ເຈົ້າຄວນປະຕິບັດ, ເຈົ້າກໍ່ຈະຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າ.

ໂດຍກ້າວໄປຂ້າງໜ້າ, ການເວົ້າເຖິງພຣະທຳຂອງພຣະເຈົ້າຄວນເປັນຫຼັກການທີ່ເຈົ້າເວົ້າ. ໂດຍປົກກະຕິແລ້ວ ເມື່ອພວກເຈົ້າມາຢູ່ຮ່ວມກັນ ພວກເຈົ້າຄວນໂອ້ລົມກັນກ່ຽວກັບພຣະທຳຂອງພຣະເຈົ້າ, ເອົາພຣະທຳຂອງພຣະເຈົ້າເປັນເນື້ອໃນໃຈຄວາມໃນການພົວພັນຂອງພວກເຈົ້າ, ເວົ້າກ່ຽວກັບສິ່ງທີ່ພວກເຈົ້າຮູ້ກ່ຽວກັບພຣະທຳເຫຼົ່ານີ້, ວິທີທີ່ພວກເຈົ້າຈະນຳພຣະທຳໄປປະຕິບັດ ແລະ ວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ. ຕາບໃດທີ່ເຈົ້າສົນທະນາກ່ຽວກັບພຣະທຳຂອງພຣະເຈົ້າ, ພຣະວິນຍານບໍລິສຸດຈະເຍືອງທາງໃຫ້ແກ່ເຈົ້າ. ການສ້າງໂລກແຫ່ງພຣະທຳຂອງພຣະເຈົ້າໃຫ້ສຳເລັດແມ່ນຕ້ອງໄດ້ອາໄສການຮ່ວມມືຈາກມະນຸດ. ຖ້າເຈົ້າບໍ່ເຂົ້າສູ່ສິ່ງນີ້, ພຣະເຈົ້າກໍ່ຈະບໍ່ມີທາງປະຕິບັດພາລະກິດໄດ້; ຖ້າເຈົ້າຫຸບປາກຂອງເຈົ້າໄວ້ ແລະ ບໍ່ເວົ້າກ່ຽວກັບພຣະທຳຂອງພຣະອົງ, ພຣະອົງກໍ່ຈະບໍ່ມີທາງທີ່ຈະ

ເບື້ອງທາງໃຫ້ແກ່ເຈົ້າ. ເມື່ອໃດກໍ່ຕາມທີ່ເຈົ້າບໍ່ຄາວຽກ, ໃຫ້ເວົ້າກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ຢ່າພຽງແຕ່ເຂົ້າຮ່ວມໃນການໂອ້ລົມກ່ຽວກັບເລື່ອງໄຮ້ສາລະ! ໃຫ້ຊີວິດຂອງເຈົ້າເຕັມໄປດ້ວຍພຣະທຳຂອງພຣະເຈົ້າ, ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະກາຍເປັນຜູ້ເຊື່ອທີ່ເຫຼື້ອມໃສ. ມັນບໍ່ກ່ຽວກັບວ່າການສົນທະນາຂອງເຈົ້າເປັນພຽງເລື່ອງຜິວເຜີນ ຫຼື ບໍ່. ຖ້າປາສະຈາກຄວາມຕື້ນກໍ່ບໍ່ສາມາດມີຄວາມເລິກ. ມັນຕ້ອງຜ່ານຂະບວນການ. ຜ່ານການຝຶກຝົນຂອງເຈົ້າ, ເຈົ້າໄດ້ເຂົ້າໃຈການເບື້ອງທາງຂອງພຣະວິນຍານບໍລິສຸດຕໍ່ເຈົ້າ ແລະ ວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງມີປະສິດທິພາບ. ຫຼັງຈາກຊ່ວງເວລາຂອງການກວດສອບ, ເຈົ້າຈະເຂົ້າສູ່ຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ. ພຽງແຕ່ຖ້າເຈົ້າຕັ້ງໃຈຮ່ວມມື, ເຈົ້າຈຶ່ງຈະສາມາດໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ.

ໃນຫຼັກການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ໜຶ່ງຢ່າງແມ່ນກ່ຽວຂ້ອງກັບຄວາມຮູ້ ແລະ ອີກໜຶ່ງຢ່າງແມ່ນກ່ຽວກັບການເຂົ້າປະຕິບັດ. ເຈົ້າຄວນຮູ້ພຣະທຳອັນໃດ? ເຈົ້າຄວນມາຮູ້ຈັກພຣະທຳທີ່ກ່ຽວຂ້ອງກັບນິມິດ (ເຊັ່ນ: ພຣະທຳທີ່ກ່ຽວຂ້ອງກັບວ່າພາລະກິດຂອງພຣະເຈົ້າໄດ້ເຂົ້າສູ່ຍຸກໃດໃນຕອນນີ້, ພຣະເຈົ້າຕ້ອງການບັນລຸຜົນຫຍັງໃນຕອນນີ້, ການບັງເກີດເປັນມະນຸດແມ່ນຫຍັງ ແລະ ອື່ນໆອີກ; ທັງໝົດນີ້ແມ່ນກ່ຽວກັບນິມິດ). ເສັ້ນທາງທີ່ມະນຸດຄວນເຂົ້າໝາຍເຖິງຫຍັງ? ສິ່ງນີ້ໝາຍເຖິງພຣະທຳຂອງພຣະເຈົ້າທີ່ມະນຸດຄວນປະຕິບັດຕາມ ແລະ ເຂົ້າປະຕິບັດ. ສິ່ງທີ່ໄດ້ກ່າວມາຂ້າງເທິງແມ່ນລັກສະນະສອງຢ່າງຂອງການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າ. ນັບຈາກນີ້ໄປ, ໃຫ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃນລັກສະນະນີ້. ຖ້າເຈົ້າມີຄວາມເຂົ້າໃຈທີ່ຊັດເຈນໃນພຣະທຳຂອງພຣະເຈົ້າທີ່ກ່ຽວກັບນິມິດ, ແລ້ວມັນກໍ່ບໍ່ຈຳເປັນຕ້ອງສືບຕໍ່ອ່ານພວກມັນຕະຫຼອດເວລາ. ສິ່ງທີ່ສຳຄັນຫຼັກໆກໍ່ຄືການກິນ ແລະ ດື່ມພຣະທຳກ່ຽວກັບການເຂົ້າປະຕິບັດໃຫ້ຫຼາຍຂຶ້ນ ເຊັ່ນ: ວິທີການຫັນຫົວໃຈຂອງເຈົ້າເຂົ້າຫາພຣະເຈົ້າ, ວິທີສະຫງົບຫົວໃຈຂອງເຈົ້າຕໍ່ໜ້າພຣະເຈົ້າ ແລະ ວິທີການປະຖິ້ມເນື້ອໜັງ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຈົ້າຄວນນຳໄປປະຕິບັດ. ຖ້າບໍ່ຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ການສົນທະນາທີ່ແທ້ຈິງກໍ່ຈະເປັນໄປບໍ່ໄດ້. ຫຼັງຈາກທີ່ເຈົ້າຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະອົງ, ເມື່ອເຈົ້າເຂົ້າໃຈວ່າແມ່ນຫຍັງຄືສິ່ງສຳຄັນ, ການສົນທະນາກໍ່ຈະເປີດກວ້າງຂຶ້ນ ແລະ ສຳລັບບັນຫາຫຍັງກໍ່ຕາມທີ່ເກີດຂຶ້ນເຈົ້າກໍ່ຈະສາມາດສົນທະນາ ແລະ ເຂົ້າໃຈຄວາມເປັນຈິງ. ເມື່ອກຳລັງສົນທະນາກ່ຽວກັບພຣະທຳຂອງພຣະເຈົ້າ, ຖ້າເຈົ້າບໍ່ມີຄວາມເປັນຈິງ, ແລ້ວເຈົ້າກໍ່ບໍ່ໄດ້ເຂົ້າໃຈວ່າແມ່ນຫຍັງຄືສິ່ງສຳຄັນ, ເຊິ່ງສະແດງໃຫ້ເຫັນວ່າ ເຈົ້າບໍ່ຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າ. ບາງຄົນອາດຮູ້ສຶກເມື່ອຍເມື່ອກຳລັງອ່ານພຣະທຳຂອງພຣະເຈົ້າ ເຊິ່ງບໍ່ແມ່ນສະພາວະທີ່ປົກກະຕິ. ສິ່ງທີ່ປົກກະຕິກໍ່ຄືການບໍ່ຮູ້ສຶກເມື່ອຍໃນການອ່ານພຣະທຳຂອງພຣະເຈົ້າຈັກເທື່ອ ແລະ ເຫັນພຣະທຳຂອງພຣະເຈົ້າເປັນສິ່ງທີ່ດີຢູ່ສະເໝີ. ນີ້ແມ່ນວິທີການທີ່ຄົນທີ່ໄດ້ເຂົ້າສູ່ພຣະທຳໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ. ເມື່ອເຈົ້າຮູ້ສຶກວ່າ ພຣະທຳຂອງພຣະເຈົ້າເປັນຈິງຫຼາຍຂຶ້ນ ແລະ ເປັນສິ່ງທີ່ມະນຸດຄວນປະຕິບັດແທ້ໆ; ເມື່ອເຈົ້າຮູ້ສຶກວ່າພຣະທຳຂອງພຣະອົງສາມາດຊ່ວຍເຫຼືອ ແລະ ເປັນປະໂຫຍດຕໍ່ມະນຸດຢ່າງຍິ່ງ ແລະ ພວກມັນຄືການສະໜອງໃຫ້ແກ່ຊີວິດຂອງມະນຸດ, ນັ້ນກໍ່ຄືພຣະວິນຍານບໍລິສຸດທີ່ໄດ້ມອບຄວາມຮູ້ສຶກນີ້ໃຫ້ແກ່ເຈົ້າ ແລະ ເປັນ

ພຣະວິນຍານບໍລິສຸດທີ່ດົນບັນດານເຈົ້າ. ສິ່ງນີ້ພິສູດໃຫ້ເຫັນວ່າ ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດໃນຕົວເຈົ້າ ແລະ ພຣະເຈົ້າບໍ່ໄດ້ຫັນໜີຈາກເຈົ້າ. ເມື່ອເຫັນວ່າພຣະເຈົ້າມີແຕ່ກ່າວພຣະທຳຢູ່ສະເໝີ, ບາງຄົນກໍ່ເລີ່ມເມື່ອຍກັບພຣະທຳຂອງພຣະອົງ ແລະ ຄິດວ່າບໍ່ມີຜົນຫຍັງ ບໍ່ວ່າພວກເຂົາຈະອ່ານພຣະທຳ ຫຼື ບໍ່, ເຊິ່ງບໍ່ແມ່ນສະພາວະທີ່ປົກກະຕິ. ພວກເຂົາຂາດຫົວໃຈທີ່ຫິວກະຫາຍເພື່ອເຂົ້າສູ່ຄວາມເປັນຈິງ ແລະ ຄົນແບບນັ້ນບໍ່ຫິວກະຫາຍ ຫຼື ໃຫ້ຄວາມສຳຄັນແກ່ການຖືກເຮັດໃຫ້ສົມບູນ. ເມື່ອໃດກໍ່ຕາມທີ່ເຈົ້າເຫັນວ່າເຈົ້າບໍ່ຫິວກະຫາຍຫາພຣະທຳຂອງພຣະເຈົ້າ, ສິ່ງນີ້ກໍ່ສະແດງໃຫ້ເຫັນວ່າເຈົ້າບໍ່ໄດ້ຢູ່ໃນສະພາວະທີ່ປົກກະຕິ. ໃນອະດີດ, ການທີ່ພຣະເຈົ້າຫັນໜີຈາກເຈົ້າ ຫຼື ບໍ່ ແມ່ນສາມາດກຳນົດໄດ້ໂດຍການທີ່ເຈົ້າມີຄວາມສະຫງົບພາຍໃນ ຫຼື ບໍ່ ແລະ ເຈົ້າມີຄວາມສຸກ ຫຼື ບໍ່. ຕອນນີ້, ສິ່ງສຳຄັນກໍ່ຄື ເຈົ້າຫິວກະຫາຍຫາພຣະທຳຂອງພຣະເຈົ້າ ຫຼື ບໍ່, ພຣະທຳຂອງພຣະອົງຄືຄວາມເປັນຈິງຂອງເຈົ້າ ຫຼື ບໍ່, ເຈົ້າມີຄວາມເຊື່ອ ຫຼື ບໍ່ ແລະ ເຈົ້າສາມາດເຮັດທຸກສິ່ງທີ່ເຈົ້າສາມາດເຮັດໄດ້ເພື່ອພຣະເຈົ້າ ຫຼື ບໍ່. ເວົ້າອີກຢ່າງໜຶ່ງກໍ່ຄື ມະນຸດຖືກຕັດສິນໂດຍຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ. ພຣະເຈົ້າຊີ້ນຳພຣະທຳຂອງພຣະອົງຕໍ່ມະນຸດຊາດທັງປວງ. ຖ້າເຈົ້າເຕັມໃຈອ່ານພຣະທຳ, ພຣະອົງກໍ່ຈະສ່ອງແສງໃຫ້ແກ່ເຈົ້າ, ແຕ່ຖ້າເຈົ້າບໍ່ເຕັມໃຈ ພຣະອົງກໍ່ຈະບໍ່ສ່ອງແສງໃຫ້ແກ່ເຈົ້າ. ພຣະເຈົ້າສ່ອງແສງສະຫວ່າງແກ່ຄົນທີ່ຫິວ ແລະ ກະຫາຍຫາຄວາມຊອບທຳ ແລະ ພຣະອົງສ່ອງແສງສະຫວ່າງໃຫ້ແກ່ຄົນທີ່ສະແຫວງຫາພຣະອົງ. ບາງຄົນເວົ້າວ່າ ພຣະເຈົ້າບໍ່ໄດ້ສ່ອງແສງສະຫວ່າງໃຫ້ແກ່ພວກເຂົາ ເຖິງແມ່ນຫຼັງຈາກທີ່ພວກເຂົາອ່ານພຣະທຳຂອງພຣະອົງ. ແຕ່ເຈົ້າອ່ານພຣະທຳເຫຼົ່ານີ້ໃນລັກສະນະໃດ? ຖ້າເຈົ້າອ່ານພຣະທຳຂອງພຣະອົງໃນລັກສະນະທີ່ມະນຸດທີ່ນັ່ງຢູ່ເທິງຫຼັງມ້າແນມເບິ່ງດອກໄມ້ ແລະ ບໍ່ໃຫ້ຄວາມສຳຄັນແກ່ຄວາມເປັນຈິງ, ພຣະເຈົ້າຈະສ່ອງສະຫວ່າງໃຫ້ແກ່ເຈົ້າໄດ້ແນວໃດ? ຄົນທີ່ບໍ່ເຊີດຊູພຣະທຳຂອງພຣະເຈົ້າຈະຖືກພຣະອົງເຮັດໃຫ້ສຳເລັດໄດ້ແນວໃດ? ຖ້າເຈົ້າບໍ່ເຊີດຊູພຣະທຳຂອງພຣະເຈົ້າ, ແລ້ວເຈົ້າກໍ່ຈະບໍ່ມີຄວາມຈິງ ແລະ ຄວາມເປັນຈິງ. ຖ້າເຈົ້າເຊີດຊູພຣະທຳຂອງພຣະອົງ, ແລ້ວເຈົ້າຈະສາມາດນຳຄວາມຈິງໄປປະຕິບັດ ແລະ ມີແຕ່ໃນເມື່ອນັ້ນ ເຈົ້າຈຶ່ງຈະມີຄວາມເປັນຈິງ. ນີ້ຄືເຫດຜົນທີ່ເຈົ້າຕ້ອງກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢູ່ຕະຫຼອດເວລາ ບໍ່ວ່າເຈົ້າຈະຄາວຽກ ຫຼື ບໍ່, ບໍ່ວ່າສະຖານະການຈະດີ ຫຼື ບໍ່ ແລະ ບໍ່ວ່າເຈົ້າກຳລັງຖືກທົດລອງ ຫຼື ບໍ່. ສະຫຼຸບກໍ່ຄືພຣະທຳຂອງພຣະເຈົ້າຄືພື້ນຖານຂອງການມີຢູ່ຂອງມະນຸດ. ບໍ່ມີໃຜສາມາດຫັນໜີຈາກພຣະທຳຂອງພຣະອົງໄດ້, ແຕ່ຕ້ອງກິນພຣະທຳຂອງພຣະອົງດັ່ງທີ່ພວກເຂົາກິນເຂົ້າສາມຄາບໃນມື້. ການຖືກເຮັດໃຫ້ສົມບູນ ແລະ ການຖືກຮັບເອົາໂດຍພຣະເຈົ້າເປັນເລື່ອງງ່າຍແບບນັ້ນບໍ? ບໍ່ວ່າເຈົ້າຈະເຂົ້າໃຈໃນປັດຈຸບັນ ຫຼື ບໍ່ ແລະ ບໍ່ວ່າເຈົ້າມີຄວາມເຂົ້າໃຈກ່ຽວກັບພາລະກິດຂອງພຣະເຈົ້າ ຫຼື ບໍ່, ເຈົ້າກໍ່ຕ້ອງກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ນີ້ຄືການເຂົ້າສູ່ຫົນທາງທີ່ຫ້າວຫັນ. ຫຼັງຈາກທີ່ໄດ້ອ່ານພຣະທຳຂອງພຣະເຈົ້າ, ໃຫ້ຟ້າວປະຕິບັດສິ່ງທີ່ເຈົ້າສາມາດປະຕິບັດໄດ້ ແລະ ປ່ອຍວາງສິ່ງເຈົ້າບໍ່ສາມາດປະຕິບັດໄດ້ກ່ອນ. ອາດຈະມີພຣະທຳຂອງພຣະເຈົ້າຫຼາຍຂໍ້ທີ່ເຈົ້າບໍ່ສາມາດເຂົ້າໃຈໄດ້ໃນຕອນຕົ້ນ, ແຕ່ຫຼັງຈາກນັ້ນສອງ ຫຼື ສາມເດືອນ, ບາງເທື່ອກໍ່ໜຶ່ງປີ, ເຈົ້າກໍ່ຈະເຂົ້າໃຈ. ມັນເປັນແບບນີ້ໄດ້ແນວໃດ? ມັນເປັນເພາະ

ພຣະເຈົ້າບໍ່ສາມາດເຮັດໃຫ້ມະນຸດສົມບູນໄດ້ພຽງມື້ໜຶ່ງ ຫຼື ສອງມື້. ໃນເວລາສ່ວນໃຫຍ່ ເມື່ອເຈົ້າອ່ານພຣະທຳຂອງພຣະອົງ, ເຈົ້າອາດບໍ່ເຂົ້າໃຈໃນທັນທີ. ໃນເວລານັ້ນ ມັນອາດເບິ່ງຄືກັບວ່າເປັນໜັງສືທຳມະດາ; ເຈົ້າຕ້ອງມີປະສົບການກັບພຣະທຳເຫຼົ່ານັ້ນໃນໄລຍະໜຶ່ງກ່ອນທີ່ເຈົ້າຈະສາມາດເຂົ້າໃຈພວກມັນໄດ້. ຍ້ອນພຣະເຈົ້າໄດ້ກ່າວພຣະທຳໄວ້ຢ່າງຫຼວງຫຼາຍ, ເຈົ້າຄວນພະຍາຍາມສຸດຄວາມສາມາດຂອງເຈົ້າເພື່ອກິນ ແລະ ດື່ມພຣະທຳຂອງພຣະອົງ ແລ້ວຫຼັງຈາກນັ້ນ ເຈົ້າຈະເຂົ້າໃຈໂດຍທີ່ເຈົ້າບໍ່ຮູ້ຕົວ ແລະ ພຣະວິນຍານບໍລິສຸດຈະສ່ອງແສງສະຫວ່າງໃຫ້ແກ່ເຈົ້າໂດຍທີ່ເຈົ້າບໍ່ຮູ້ຕົວ. ເມື່ອເວລາພຣະວິນຍານບໍລິສຸດສ່ອງສະຫວ່າງໃຫ້ແກ່ມະນຸດ, ມັນກໍ່ມັກເກີດຂຶ້ນໂດຍທີ່ມະນຸດບໍ່ຮູ້ຕົວ. ພຣະອົງສ່ອງແສງສະຫວ່າງ ແລະ ຊີ້ນຳເຈົ້າ ເມື່ອເຈົ້າຫິວກະຫາຍ ແລະ ສະແຫວງຫາ. ຫຼັກການທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດແມ່ນອີງໃສ່ພຣະທຳຂອງພຣະເຈົ້າທີ່ເຈົ້າກິນ ແລະ ດື່ມ. ທຸກຄົນທີ່ບໍ່ໃຫ້ຄວາມສຳຄັນຕໍ່ພຣະທຳຂອງພຣະເຈົ້າ ແລະ ມີທ່າທີ່ໆແຕກຕ່າງຕໍ່ພຣະທຳຂອງພຣະອົງ ແລ້ວເຊື່ອໃນຄວາມຄິດທີ່ງົມງວາຍຂອງພວກເຂົາວ່າ ມັນບໍ່ໄດ້ແຕກຕ່າງເຖິງວ່າພວກເຂົາຈະອ່ານພຣະທຳຂອງພຣະອົງ ຫຼື ບໍ່, ຄົນເຫຼົ່າເປັນຄົນທີ່ບໍ່ມີຄວາມເປັນຈິງ. ພາລະກິດຂອງພຣະວິນຍານບໍລິສຸດ ຫຼື ແສງສະຫວ່າງຂອງພຣະອົງບໍ່ສາມາດປາກົດເຫັນໃນຄົນດັ່ງກ່າວ. ຄົນແບບນີ້ພຽງແຕ່ໃຊ້ຊີວິດຢ່າງໄຮ້ຄ່າ ແລະ ເປັນຄົນທຳທ່າເຮັດໂດຍທີ່ບໍ່ມີຄຸນສົມບັດຢ່າງແທ້ຈິງຄືກັນກັບ ທ້າວ ນາງກົວໃນຄຳອຸປະມາ[ກ].

ຖ້າບໍ່ມີພຣະທຳຂອງພຣະເຈົ້າເປັນຄວາມເປັນຈິງຂອງເຈົ້າ, ເຈົ້າກໍ່ບໍ່ມີວຸດທິພາວະທີ່ແທ້ຈິງ. ເມື່ອຮອດເວລາທີ່ຈະຖືກທົດລອງ, ເຈົ້າກໍ່ຈະລົ້ມຢ່າງແນ່ນອນ ແລະ ໃນເມື່ອນັ້ນເອງ ວຸດທິພາວະທີ່ແທ້ຈິງຂອງເຈົ້າຈະຖືກເປີດເຜີຍ. ແຕ່ເມື່ອຖືກອ້ອມລ້ອມດ້ວຍການທົດລອງ, ຄົນທີ່ສະແຫວງຫາເພື່ອເຂົ້າສູ່ຄວາມເປັນຈິງຢ່າງເປັນປົກກະຕິກໍ່ຈະເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າ. ຜູ້ທີ່ມີຈິດສຳນຶກ ແລະ ຄົນທີ່ຫິວກະຫາຍຫາພຣະເຈົ້າຄວນດຳເນີນການຕົວແທ້ຈິງເພື່ອຕອບແທນພຣະເຈົ້າສຳລັບຄວາມຮັກຂອງພຣະອົງ. ຜູ້ທີ່ບໍ່ມີຄວາມເປັນຈິງແມ່ນບໍ່ສາມາດຢຶດໝັ້ນເມື່ອຜະເຊີນໜ້າກັບແມ່ນແຕ່ບັນຫາເລັກນ້ອຍ. ສິ່ງດັ່ງກ່າວຄືຄວາມແຕກຕ່າງລະຫວ່າງຄົນທີ່ມີວຸດທິພາວະແທ້ຈິງ ແລະ ຄົນທີ່ບໍ່ມີ. ເຖິງແມ່ນວ່າພວກເຂົາທັງກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເປັນຫຍັງບາງຄົນຈຶ່ງສາມາດຢຶດໝັ້ນເມື່ອຢູ່ທ່າມກາງການທົດລອງ, ໃນຂະນະທີ່ຄົນອື່ນແລ່ນໜີໄປ? ຄວາມແຕກຕ່າງທີ່ຊັດເຈນກໍ່ຄືບາງຄົນຂາດວຸດທິພາວະທີ່ແທ້ຈິງ; ພວກເຂົາບໍ່ມີພຣະທຳຂອງພຣະເຈົ້າທີ່ເຮັດໜ້າທີ່ເປັນຄວາມເປັນຈິງຂອງພວກເຂົາ ແລະ ພຣະທຳຂອງພຣະອົງບໍ່ໄດ້ຝັງຮາກພາຍໃນພວກເຂົາ. ທັນທີທີ່ພວກເຂົາຖືກທົດລອງ, ພວກເຂົາກໍ່ໄປເຖິງປາຍເສັ້ນທາງຂອງພວກເຂົາ. ແລ້ວເປັນຫຍັງບາງຄົນຈຶ່ງສາມາດຢຶດໝັ້ນເມື່ອຢູ່ທ່າມກາງການທົດລອງ? ມັນເປັນເພາະພວກເຂົາເຂົ້າໃຈຄວາມຈິງ ແລະ ມີນິມິດ ແລະ ພວກເຂົາເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ເງື່ອນໄຂຂອງພຣະອົງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງສາມາດຢຶດໝັ້ນເມື່ອຢູ່ທ່າມກາງການທົດລອງ. ນີ້ແມ່ນວຸດທິພາວະທີ່ແທ້ຈິງ ແລະ ນີ້ເປັນຊີວິດເຊັ່ນ

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ “ໃນຄຳອຸປະມາ”.

ກັນ. ບາງຄົນອາດຍັງໄດ້ອ່ານພຣະທຳຂອງພຣະເຈົ້າ ແຕ່ບໍ່ໄດ້ນຳພຣະທຳເຫຼົ່ານີ້ໄປປະຕິບັດ, ບໍ່ໄດ້ຈິງຈັງກັບພວກມັນ; ຄົນທີ່ບໍ່ຈິງຈັງກັບພຣະທຳເຫຼົ່ານັ້ນກໍ່ບໍ່ໃຫ້ຄວາມສຳຄັນໃນການປະຕິບັດ. ຄົນທີ່ບໍ່ມີພຣະທຳຂອງພຣະເຈົ້າທີ່ເຮັດໜ້າທີ່ເປັນຄວາມເປັນຈິງຂອງພວກເຂົາກໍ່ບໍ່ມີວຸດທິພາວະທີ່ແທ້ຈິງ ແລະຄົນດັ່ງກ່າວກໍ່ບໍ່ສາມາດຍຶດໝັ້ນຜ່ານການທົດລອງໄດ້.

ເມື່ອພຣະທຳຂອງພຣະເຈົ້າປາກົດຂຶ້ນ, ເຈົ້າກໍ່ຄວນຮັບເອົາພວກມັນໃນທັນທີ ແລ້ວກິນ ແລະດື່ມພຣະທຳເຫຼົ່ານັ້ນ. ບໍ່ວ່າເຈົ້າຈະເຂົ້າໃຈພຣະທຳເຫຼົ່ານັ້ນຫຼາຍສໍ່າໃດ, ໜຶ່ງມຸມມອງທີ່ເຈົ້າຕ້ອງຍຶດໝັ້ນກໍ່ຄືການກິນ ແລະ ດື່ມ, ການຮູ້ຈັກ ແລະ ການປະຕິບັດພຣະທຳຂອງພຣະອົງ. ນີ້ແມ່ນສິ່ງທີ່ເຈົ້າຄວນສາມາດເຮັດໄດ້. ບໍ່ຕ້ອງກັງວົນວ່າວຸດທິພາວະຂອງເຈົ້າອາດມີຫຼາຍສໍ່າໃດ; ພຽງແຕ່ໃສ່ໃຈກັບການກິນ ແລະ ດື່ມພຣະທຳຂອງພຣະອົງ. ນີ້ຄືສິ່ງທີ່ມະນຸດຄວນໃຫ້ການຮ່ວມມື. ຊີວິດຝ່າຍວິນຍານຂອງເຈົ້າຄືການພະຍາຍາມເຂົ້າສູ່ຄວາມເປັນຈິງໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າເປັນຫຼັກ ແລະນຳພຣະທຳເຫຼົ່ານັ້ນໄປປະຕິບັດ. ມັນບໍ່ແມ່ນທຸລະຂອງເຈົ້າທີ່ຈະໄປໃສ່ໃຈກັບສິ່ງອື່ນ. ຜູ້ນຳຄຣິສຕະຈັກຄວນທີ່ຈະສາມາດຊີ້ນຳອ້າຍເອື້ອຍນ້ອງຂອງພວກເຂົາທຸກຄົນ ເພື່ອວ່າພວກເຂົາຈະໄດ້ຮູ້ຈັກວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າ. ນີ້ແມ່ນຄວາມຮັບຜິດຊອບຂອງຜູ້ນຳຄຣິສຕະຈັກແຕ່ລະຄົນ. ບໍ່ວ່າຈະເປັນຄົນໜຸ່ມ ຫຼື ຜູ້ສູງອາຍຸ, ທຸກຄົນຄວນຖືເອົາການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າເປັນສິ່ງທີ່ສຳຄັນຫຼາຍ ແລະ ຄວນຮັກສາພຣະທຳນັ້ນໄວ້ໃນຫົວໃຈຂອງພວກເຂົາ. ການເຂົ້າສູ່ຄວາມເປັນຈິງນີ້ໝາຍເຖິງການເຂົ້າສູ່ຍຸກແຫ່ງລາຊະອານາຈັກ. ມື້ນີ້ ຄົນສ່ວນໃຫຍ່ຮູ້ສຶກວ່າພວກເຂົາບໍ່ສາມາດມີຊີວິດຢູ່ໄດ້ ຖ້າບໍ່ໄດ້ກິນ ແລະ ດື່ມພຣະທຳຂອງພຣະອົງ ແລະ ຮູ້ສຶກວ່າພຣະທຳຂອງພຣະອົງແມ່ນສົດໃໝ່ບໍ່ວ່າຈະເປັນເວລາໃດກໍ່ຕາມ. ນີ້ໝາຍຄວາມວ່າ ພວກເຂົາກຳລັງເລີ່ມກ້າວເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ພຣະເຈົ້າໄດ້ໃຊ້ພຣະທຳເພື່ອປະຕິບັດພາລະກິດຂອງພຣະອົງ ແລະ ສະໜອງໃຫ້ແກ່ມະນຸດ. ເມື່ອທຸກຄົນປາຖະໜາ ແລະ ຫິວກະຫາຍຫາພຣະທຳຂອງພຣະເຈົ້າ, ມະນຸດຊາດກໍ່ຈະເຂົ້າສູ່ໂລກແຫ່ງພຣະທຳຂອງພຣະອົງ.

ພຣະເຈົ້າໄດ້ກ່າວໄວ້ຢ່າງຫຼວງຫຼາຍ. ເຈົ້າຮູ້ຫຼາຍສໍ່າໃດ? ເຈົ້າໄດ້ນຳໄປປະຕິບັດຫຼາຍສໍ່າໃດ? ຖ້າຜູ້ນຳຄຣິສຕະຈັກທີ່ບໍ່ໄດ້ຊີ້ນຳອ້າຍເອື້ອຍນ້ອງຂອງພວກເຂົາເຂົ້າສູ່ຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ, ແລ້ວພວກເຂົາກໍ່ໄດ້ປະລະໜ້າທີ່ຂອງພວກເຂົາ ແລະ ລົ້ມເຫຼວໃນການປະຕິບັດຕໍ່ຄວາມຮັບຜິດຊອບຂອງພວກເຂົາ! ບໍ່ວ່າຄວາມເຂົ້າໃຈຂອງເຈົ້າຈະເລິກເຊິ່ງ ຫຼື ມີພຽງແຕ່ຜິວເຜີນ, ບໍ່ວ່າ ເຈົ້າຈະມີຄວາມເຂົ້າໃຈໃນລະດັບໃດກໍ່ຕາມ, ເຈົ້າຕ້ອງຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະອົງ, ເຈົ້າຕ້ອງເອົາໃຈໃສ່ຫຼາຍຕໍ່ພຣະທຳຂອງພຣະອົງ ແລະ ເຂົ້າໃຈຄວາມສຳຄັນ ແລະ ຄວາມຈຳເປັນໃນການກິນ ແລະ ການດື່ມພຣະທຳເຫຼົ່ານັ້ນ. ພຣະເຈົ້າໄດ້ກ່າວມາຫຼາຍແລ້ວ, ຖ້າເຈົ້າບໍ່ກິນ ແລະ ດື່ມພຣະທຳຂອງພຣະອົງ ຫຼື ພະຍາຍາມສະແຫວງຫາ ຫຼື ນຳເອົາພຣະທຳຂອງພຣະອົງໄປປະຕິບັດ, ນີ້ກໍ່ບໍ່ສາມາດເອີ້ນວ່າເປັນການເຊື່ອໃນພຣະເຈົ້າ. ຍ້ອນເຈົ້າເຊື່ອໃນພຣະເຈົ້າ, ແລ້ວເຈົ້າກໍ່ຕ້ອງກິນ ແລະ ດື່ມພຣະທຳຂອງພຣະອົງ, ຜະເຊີນກັບພຣະທຳຂອງພຣະອົງ ແລະ ໃຊ້ຊີວິດຕາມພຣະທຳຂອງພຣະອົງ. ມີພຽງແຕ່ສິ່ງນີ້

ຈຶ່ງສາມາດເອີ້ນໄດ້ວ່າເປັນການເຊື່ອໃນພຣະເຈົ້າ! ຖ້າເຈົ້າເວົ້າວ່າເຈົ້າເຊື່ອໃນພຣະເຈົ້າດ້ວຍປາກຂອງເຈົ້າ ແຕ່ຍັງບໍ່ສາມາດນຳພຣະທຳຂໍ້ໃດຂອງພຣະອົງໄປປະຕິບັດ ຫຼື ກໍ່ໃຫ້ເກີດຄວາມເປັນຈິງໃດເລີຍ, ສິ່ງນີ້ບໍ່ເອີ້ນວ່າເປັນການເຊື່ອໃນພຣະເຈົ້າ. ກົງກັນຂ້າມ, ມັນຄື "ການຊອກຫາເຂົ້າຈີ່ເພື່ອສະໜອງຄວາມຫິວ". ການເວົ້າເຖິງຄຳພະຍານຕື້ນໆ, ສິ່ງທີ່ບໍ່ມີປະໂຫຍດ ແລະ ເລື່ອງຜິວເຜີນເທົ່ານັ້ນ ໂດຍບໍ່ມີຄວາມເປັນຈິງແມ່ນແຕ່ໜ້ອຍດຽວ: ສິ່ງເຫຼົ່ານີ້ບໍ່ໄດ້ປະກອບເປັນຄວາມເຊື່ອໃນພຣະເຈົ້າ ແລະ ເຈົ້າບໍ່ໄດ້ເຂົ້າໃຈວິທີທາງທີ່ຖືກຕ້ອງໃນການເຊື່ອໃນພຣະເຈົ້າ. ເປັນຫຍັງເຈົ້າຈຶ່ງຕ້ອງກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃຫ້ໄດ້ຫຼາຍເທົ່າທີ່ເປັນໄປໄດ້? ຖ້າເຈົ້າບໍ່ກິນ ແລະ ດື່ມພຣະທຳຂອງພຣະອົງ ແຕ່ສະແຫວງຫາພຽງແຕ່ເພື່ອຂຶ້ນສະຫວັນ, ນັ້ນແມ່ນການເຊື່ອໃນພຣະເຈົ້າບໍ? ແມ່ນຫຍັງຄືຂັ້ນຕອນທຳອິດທີ່ຜູ້ເຊື່ອໃນພຣະເຈົ້າຄວນເຮັດ? ພຣະເຈົ້າເຮັດໃຫ້ມະນຸດສົມບູນດ້ວຍເສັ້ນທາງໃດ? ເຈົ້າສາມາດຖືກເຮັດໃຫ້ສົມບູນ ໂດຍບໍ່ຕ້ອງກິນ ແລະ ດື່ມພຣະທຳຂອງພຣະເຈົ້າບໍ? ເຈົ້າສາມາດຖືວ່າເປັນປະຊາຊົນໃນອານາຈັກ ໂດຍບໍ່ມີພຣະທຳຂອງພຣະເຈົ້າທີ່ເຮັດໜ້າທີ່ເປັນຄວາມເປັນຈິງຂອງເຈົ້າບໍ? ຄວາມເຊື່ອໃນພຣະເຈົ້າແມ່ນໝາຍເຖິງຫຍັງແທ້ໆ? ຢ່າງໜ້ອຍທີ່ສຸດ, ຜູ້ເຊື່ອໃນພຣະເຈົ້າຄວນປະພຶດດີໃນພາຍນອກ; ສິ່ງທີ່ສຳຄັນທີ່ສຸດກໍ່ຄື ການມີພຣະທຳຂອງພຣະເຈົ້າ. ບໍ່ວ່າດ້ວຍຫຍັງກໍ່ຕາມ ເຈົ້າບໍ່ສາມາດຫັນໜີຈາກພຣະທຳຂອງພຣະອົງໄດ້. ການຮູ້ຈັກພຣະເຈົ້າ ແລະ ການສຳເລັດຕາມເຈດຕະນາຂອງພຣະອົງລ້ວນແລ້ວແຕ່ຖືກບັນລຸຜ່ານພຣະທຳຂອງພຣະອົງ. ໃນອະນາຄົດ, ທຸກຊາດ, ທຸກນິກາຍ, ທຸກສາສະໜາ ແລະ ທຸກພາກສ່ວນຈະຖືກເອົາຊະນະຜ່ານພຣະທຳຂອງພຣະເຈົ້າ. ພຣະເຈົ້າຈະກ່າວໂດຍກົງ ແລະ ທຸກຄົນຈະຮັບເອົາພຣະທຳຂອງພຣະອົງໄວ້ໃນມືຂອງພວກເຂົາ ແລະ ດ້ວຍວິທີນີ້, ມະນຸດຊາດກໍ່ຈະຖືກເຮັດໃຫ້ສົມບູນ. ພຣະທຳຂອງພຣະເຈົ້າຈະເຜີຍແຜ່ໄປທົ່ວທັງພາຍໃນ ແລະ ພາຍນອກ: ມະນຸດຊາດຈະກ່າວພຣະທຳຂອງພຣະເຈົ້າດ້ວຍປາກຂອງພວກເຂົາ, ປະຕິບັດຕາມພຣະທຳຂອງພຣະເຈົ້າ ແລະ ຮັກສາພຣະທຳຂອງພຣະອົງໄວ້ພາຍໃນ, ຍັງຄົງແຊ່ໃນພຣະທຳຂອງພຣະເຈົ້າທັງພາຍໃນ ແລະ ພາຍນອກ. ດັ່ງນັ້ນ, ມະນຸດຊາດຈຶ່ງຈະຖືກເຮັດໃຫ້ສົມບູນ. ຄົນທີ່ປະຕິບັດຕາມເຈດຕະນາຂອງພຣະເຈົ້າ ແລະ ສາມາດເປັນພະຍານໃຫ້ແກ່ພຣະອົງ, ຄົນເຫຼົ່ານີ້ຄືຄົນທີ່ມີພຣະທຳຂອງພຣະເຈົ້າເປັນຄວາມເປັນຈິງຂອງພວກເຂົາ.

ການເຂົ້າສູ່ຍຸກແຫ່ງພຣະທຳ ນັ້ນກໍ່ຄື ຍຸກແຫ່ງອານາຈັກພັນປີ ຄືພາລະກິດທີ່ກຳລັງສຳເລັດໃນປັດຈຸບັນ. ນັບຕັ້ງແຕ່ນີ້ຕໍ່ໄປ, ໃຫ້ປະຕິບັດການສົນທະນາກ່ຽວກັບພຣະທຳຂອງພຣະເຈົ້າ. ມີພຽງແຕ່ດ້ວຍວິທີການກິນ ແລະ ດື່ມ ພ້ອມທັງການຜະເຊີນກັບພຣະທຳຂອງພຣະເຈົ້າເທົ່ານັ້ນ ເຈົ້າຈຶ່ງຈະສາມາດດຳລົງຊີວິດຕາມພຣະທຳຂອງພຣະເຈົ້າ. ເຈົ້າຕ້ອງກໍ່ໃຫ້ເກີດປະສົບການຕົວຈິງບາງຢ່າງເພື່ອທີ່ຈະຊັກຈູງຄົນອື່ນ. ຖ້າເຈົ້າບໍ່ສາມາດດຳລົງຊີວິດຕາມຄວາມເປັນຈິງໃນພຣະທຳຂອງພຣະເຈົ້າ, ບໍ່ມີຜູ້ໃດຈະຖືກຊັກຈູງໃຫ້ເຊື່ອໄດ້! ທຸກຄົນທີ່ຖືກພຣະເຈົ້າໃຊ້ກໍ່ສາມາດດຳລົງຊີວິດຕາມຄວາມເປັນຈິງໃນພຣະທຳຂອງພຣະເຈົ້າໄດ້. ຖ້າເຈົ້າບໍ່ສາມາດກໍ່ໃຫ້ເກີດຄວາມເປັນຈິງນີ້ໄດ້ ແລະ ເປັນພະຍານໃຫ້ແກ່ພຣະເຈົ້າ, ນີ້ກໍ່ສະແດງວ່າ ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດໃນຕົວເຈົ້າ ແລະ ເຈົ້າກໍບໍ່ໄດ້ຖືກ

ເຮັດໃຫ້ສົມບູນ. ນີ້ຄືຄວາມສຳຄັນໃນພຣະທຳຂອງພຣະເຈົ້າ. ເຈົ້າມີຫົວໃຈທີ່ຫິວກະຫາຍຫາພຣະທຳຂອງພຣະເຈົ້າບໍ? ຄົນທີ່ຫິວກະຫາຍຫາພຣະທຳຂອງພຣະເຈົ້າກໍ່ຫິວກະຫາຍຫາຄວາມຈິງ ແລະ ມີພຽງແຕ່ຄົນແບບນັ້ນຈຶ່ງຈະໄດ້ຮັບພອນຈາກພຣະເຈົ້າ. ໃນອະນາຄົດ, ມັນຈະມີພຣະທຳອີກຫຼາຍຂໍ້ທີ່ພຣະເຈົ້າຈະກ່າວຕໍ່ທຸກສາສະໜາ ແລະ ທຸກນິກາຍຕ່າງໆ. ພຣະອົງກ່າວກ່ອນ ແລະ ເປັ່ງສຽງຂອງພຣະອົງທ່າມກາງພວກເຈົ້າເພື່ອເຮັດໃຫ້ພວກເຈົ້າສົມບູນ ກ່ອນທີ່ຈະສືບຕໍ່ກ່າວ ແລະ ເປັ່ງສຽງຂອງພຣະອົງທ່າມກາງຄົນຕ່າງຊາດເພື່ອເອົາຊະນະພວກເຂົາ. ຜ່ານພຣະທຳຂອງພຣະອົງ, ທຸກຄົນຈະເຊື່ອໝັ້ນຢ່າງຈິງໃຈ ແລະ ຢ່າງສິ້ນເຊີງ. ຜ່ານພຣະທຳຂອງພຣະເຈົ້າ ແລະ ການເປີດເຜີຍຂອງພຣະອົງ, ອຸປະນິໄສທີ່ເສື່ອມຊາມຂອງມະນຸດຈະຫາຍໄປ, ເຂົາຈະຮັບເອົາລັກສະນະຂອງມະນຸດ ແລະ ອຸປະນິໄສທີ່ກະບົດຂອງເຂົາກໍ່ຈະຫຼຸດລົງ. ພຣະທຳປະຕິບັດພາລະກິດຕໍ່ມະນຸດດ້ວຍສິດອຳນາດ ແລະ ເອົາຊະນະມະນຸດດ້ວຍແສງສະຫວ່າງຂອງພຣະເຈົ້າ. ພາລະກິດທີ່ພຣະເຈົ້າເຮັດໃນຍຸກປັດຈຸບັນ ພ້ອມດ້ວຍຈຸດປ່ຽນແປງໃນພາລະກິດຂອງພຣະອົງ, ລ້ວນແລ້ວແຕ່ສາມາດຖືກຄົ້ນພົບໃນພຣະທຳຂອງພຣະອົງ. ຖ້າເຈົ້າບໍ່ອ່ານພຣະທຳຂອງພຣະອົງ, ເຈົ້າກໍ່ຈະບໍ່ເຂົ້າໃຈຫຍັງ. ຜ່ານການກິນ ແລະ ການດື່ມພຣະທຳຂອງພຣະອົງດ້ວຍຕົວເຈົ້າເອງ ແລະ ຜ່ານການມີສ່ວນສົນທະນາກັບອ້າຍເອື້ອຍນ້ອງຂອງເຈົ້າ ແລະ ປະສົບການຕົວຈິງຂອງເຈົ້າ, ເຈົ້າຈະໄດ້ຮັບຄວາມຮູ້ທີ່ສົມບູນກ່ຽວກັບພຣະທຳຂອງພຣະເຈົ້າ. ມີພຽງແຕ່ເມື່ອນັ້ນ, ເຈົ້າຈຶ່ງຈະສາມາດໃຊ້ຊີວິດຕາມຄວາມເປັນຈິງຢ່າງແທ້ຈິງ.

# ທຸກສິ່ງຖືກບັນລຸໂດຍພຣະທຳຂອງພຣະເຈົ້າ

ພຣະເຈົ້າກ່າວພຣະທຳຂອງພຣະອົງ ແລະ ເຮັດພາລະກິດຂອງພຣະອົງຕາມຍຸກທີ່ແຕກຕ່າງກັນ ແລະ ໃນຍຸກທີ່ແຕກຕ່າງກັນ, ພຣະອົງກ່າວພຣະທຳທີ່ແຕກຕ່າງກັນ. ພຣະເຈົ້າບໍ່ໄດ້ປະຕິບັດຕາມກົດເກນໃດໆ ຫຼື ເຮັດຊໍ້າພາລະກິດເດີມ ຫຼື ຮູ້ສຶກອຸກອັ່ງກັບສິ່ງຕ່າງໆໃນອະດີດ; ພຣະອົງແມ່ນພຣະເຈົ້າຜູ້ທີ່ໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ ແລະ ພຣະອົງກ່າວພຣະທຳໃໝ່ທຸກມື້. ເຈົ້າຄວນປະຕິບັດຕາມສິ່ງທີ່ຄວນປະຕິບັດໃນມື້ນີ້; ນີ້ແມ່ນຄວາມຮັບຜິດຊອບ ແລະ ໜ້າທີ່ຂອງມະນຸດ. ມັນສຳຄັນຢູ່ທີ່ການປະຕິບັດຕ້ອງເນັ້ນໃສ່ແສງສະຫວ່າງ ແລະ ພຣະທຳຂອງພຣະເຈົ້າໃນຍຸກປັດຈຸບັນ. ພຣະເຈົ້າບໍ່ໄດ້ປະຕິບັດຕາມກົດເກນ ແລະ ສາມາດກ່າວໄດ້ຈາກຫຼາຍມຸມມອງທີ່ແຕກຕ່າງກັນເພື່ອເຮັດໃຫ້ສະຕິປັນຍາ ແລະ ອຳນາດອັນໄພສານຂອງພຣະອົງນັ້ນຊັດເຈນ. ມັນບໍ່ສຳຄັນວ່າພຣະອົງຈະກ່າວຈາກມຸມມອງຂອງພຣະວິນຍານ ຫຼື ຂອງມະນຸດ ຫຼື ຂອງບຸກຄົນທີສາມ ພຣະເຈົ້າກໍ່ຍັງເປັນພຣະເຈົ້າຢູ່ສະເໝີ ແລະ ເຈົ້າບໍ່ສາມາດເວົ້າໄດ້ວ່າພຣະອົງບໍ່ແມ່ນພຣະເຈົ້າ ຍ້ອນມຸມມອງຂອງມະນຸດທີ່ພຣະອົງກ່າວ. ໃນທ່າມກາງບາງຄົນ ມັນມີແນວຄິດທີ່ປາກົດຂຶ້ນໂດຍເປັນຜົນມາຈາກມຸມມອງແຕກຕ່າງກັນທີ່ພຣະເຈົ້າກ່າວ. ຄົນແບບນັ້ນບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງພຣະອົງ. ຖ້າພຣະເຈົ້າໄດ້ກ່າວຈາກມຸມມອງດຽວຢູ່ສະເໝີ, ມະນຸດຈະບໍ່ກຳນົດກົດເກນຕ່າງໆກ່ຽວກັບພຣະເຈົ້າບໍ? ພຣະເຈົ້າຈະປ່ອຍໃຫ້ມະນຸດເຮັດແບບນັ້ນໄດ້ບໍ? ບໍ່ວ່າພຣະເຈົ້າຈະກ່າວຈາກມຸມມອງໃດກໍ່ຕາມ, ພຣະອົງກໍ່ມີຈຸດປະສົງທີ່ເຮັດແບບນັ້ນ. ຖ້າພຣະເຈົ້າກ່າວຈາກມຸມມອງຂອງພຣະວິນຍານຢູ່ສະເໝີ, ເຈົ້າຈະສາມາດພົວພັນກັບພຣະອົງບໍ? ດັ່ງນັ້ນ, ບາງຄັ້ງ ພຣະອົງກ່າວໃນບຸກຄົນທີສາມເພື່ອໃຫ້ພຣະທຳຂອງພຣະອົງແກ່ເຈົ້າ ແລະ ນຳພາເຈົ້າເຂົ້າສູ່ຄວາມເປັນຈິງ. ທຸກສິ່ງທີ່ພຣະເຈົ້າເຮັດກໍ່ແມ່ນເໝາະສົມແລ້ວ. ສະຫຼຸບກໍ່ຄື ພຣະເຈົ້າເຮັດທຸກສິ່ງ ແລະ ເຈົ້າບໍ່ຄວນສົງໄສກ່ຽວກັບສິ່ງນີ້. ພຣະອົງເປັນພຣະເຈົ້າ ແລະ ດ້ວຍເຫດນັ້ນ ບໍ່ວ່າພຣະອົງຈະກ່າວຈາກມຸມມອງໃດກໍ່ຕາມ, ພຣະອົງກໍ່ຍັງຄົງເປັນພຣະເຈົ້າຢູ່ສະເໝີ. ນີ້ແມ່ນຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້. ບໍ່ວ່າພຣະອົງຈະປະຕິບັດພາລະກິດແນວໃດກໍ່ຕາມ, ພຣະອົງກໍ່ຍັງເປັນພຣະເຈົ້າ ແລະ ແກ່ນແທ້ຂອງພຣະອົງຈະບໍ່ປ່ຽນແປງເລີຍ! ເປໂຕຮັກພຣະເຈົ້າຫຼາຍ ແລະ ເປັນມະນຸດເຊິ່ງເປັນທີ່ພໍໃຈຂອງພຣະເຈົ້າ, ແຕ່ພຣະເຈົ້າບໍ່ໄດ້ເຫັນວ່າເຂົາເປັນພຣະຜູ້ເປັນເຈົ້າ ຫຼື ພຣະຄຣິດ, ຍ້ອນແກ່ນແທ້ຂອງສິ່ງທີ່ມີຊີວິດກໍ່ຄືສິ່ງທີ່ມັນເປັນ ແລະ ມັນບໍ່ສາມາດປ່ຽນແປງໄດ້. ໃນພາລະກິດຂອງພຣະອົງ ພຣະເຈົ້າບໍ່ໄດ້ປະຕິບັດຕາມກົດເກນໃດໆ ແຕ່ພຣະອົງໃຊ້ວິທີການທີ່ແຕກຕ່າງກັນເພື່ອເຮັດໃຫ້ພາລະກິດຂອງພຣະອົງນັ້ນມີປະສິດທິພາບ ແລະ ເພື່ອເຮັດໃຫ້ຄວາມຮູ້ຂອງມະນຸດກ່ຽວກັບພຣະອົງເລິກເຊິ່ງຍິ່ງຂຶ້ນ. ວິທີການປະຕິບັດພາລະກິດຂອງພຣະອົງທຸກຢ່າງຊ່ວຍໃຫ້ມະນຸດຮູ້ຈັກພຣະອົງ ແລະ ເຮັດໃຫ້ມະນຸດສົມບູນແບບ. ບໍ່ວ່າພຣະອົງຈະໃຊ້ວິທີການປະຕິບັດພາລະກິດໃດກໍ່ຕາມ, ແຕ່ລະວິທີການແມ່ນເພື່ອສ້າງມະນຸດ ແລະ ເຮັດໃຫ້ມະນຸດສົມບູນແບບ. ເຖິງແມ່ນວ່າໜຶ່ງໃນວິທີການປະຕິບັດພາລະກິດຂອງພຣະອົງອາດໃຊ້ເວລາດົນຫຼາຍ, ນີ້ກໍ່ເພື່ອເຮັດໃຫ້ຄວາມເຊື່ອຂອງ

ມະນຸດໃນພຣະອົງເຂັ້ມແຂງຂຶ້ນ. ດັ່ງນັ້ນ, ມັນບໍ່ຄວນມີຂໍ້ສົງໄສໃນຫົວໃຈຂອງເຈົ້າອີກຕໍ່ໄປ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນບາດກ້າວໃນພາລະກິດພຣະເຈົ້າ ແລະ ພວກເຈົ້າຕ້ອງເຊື່ອຟັງ.

ສິ່ງທີ່ໄດ້ກ່າວເຖິງໃນມື້ນີ້ຄືເສັ້ນທາງເຂົ້າສູ່ຄວາມຈິງ, ບໍ່ແມ່ນການຂຶ້ນສະຫວັນ ຫຼື ການປົກຄອງດັ່ງກະສັດ; ທຸກສິ່ງທີ່ໄດ້ກ່າວເຖິງຄືການສະແຫວງຫາເພື່ອເຂົ້າສູ່ຄວາມເປັນຈິງ. ບໍ່ມີການສະແຫວງຫາທີ່ເປັນຈິງໄປຫຼາຍກວ່ານີ້ ແລະ ການເວົ້າເຖິງການປົກຄອງດັ່ງກະສັດກໍ່ບໍ່ເປັນຈິງ. ມະນຸດມີຄວາມຢາກຮູ້ຢາເຫັນຫຼາຍ ແລະ ເຂົາຍັງວັດແທກພາລະກິດຂອງພຣະເຈົ້າໃນມື້ນີ້ດ້ວຍແນວຄວາມຄິດທາງສາສະໜາຂອງເຂົາ. ຫຼັງຈາກທີ່ມີປະສົບການຫຼາຍຢ່າງກ່ຽວກັບວິທີການປະຕິບັດພາລະກິດຂອງພຣະເຈົ້າ, ມະນຸດກໍ່ຍັງບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ, ຍັງສະແຫວງຫາໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ຍັງຊອກເບິ່ງວ່າພຣະທຳຂອງພຣະເຈົ້າຖືກບັນລຸຜົນແລ້ວ ຫຼື ບໍ່. ນີ້ບໍ່ແມ່ນຄວາມໂງ່ຈ້າທີ່ຮ້າຍແຮງບໍ? ຖ້າປາສະຈາກການບັນລຸຜົນໃນພຣະທຳຂອງພຣະເຈົ້າ, ເຈົ້າຍັງຈະເຊື່ອວ່າພຣະອົງເປັນພຣະເຈົ້າບໍ? ມື້ນີ້, ຫຼາຍຄົນທີ່ເປັນແບບນັ້ນໃນຄຣິສຕະຈັກກຳລັງລໍຖ້າເບິ່ງໝາຍສຳຄັນ ແລະ ສິ່ງອັດສະຈັນຕ່າງໆ. ພວກເຂົາເວົ້າວ່າ ຖ້າພຣະທຳຂອງພຣະເຈົ້າໄດ້ຖືກບັນລຸ, ແລ້ວພຣະອົງກໍ່ເປັນພຣະເຈົ້າ; ຖ້າພຣະທຳຂອງພຣະເຈົ້າບໍ່ໄດ້ຖືກບັນລຸຜົນ, ແລ້ວພຣະອົງກໍ່ບໍ່ແມ່ນພຣະເຈົ້າ. ແລ້ວເຈົ້າເຊື່ອໃນພຣະເຈົ້າຍ້ອນການບັນລຸຜົນໃນພຣະທຳຂອງພຣະອົງ ຫຼື ຍ້ອນວ່າພຣະອົງເປັນພຣະເຈົ້າເອງ? ມຸມມອງຂອງມະນຸດກ່ຽວກັບຄວາມເຊື່ອໃນພຣະເຈົ້າຕ້ອງເຮັດໃຫ້ຖືກຕ້ອງ! ເມື່ອເຈົ້າເຫັນວ່າພຣະທຳຂອງພຣະເຈົ້າບໍ່ໄດ້ຖືກບັນລຸ, ເຈົ້າກໍ່ແລ່ນໜີ ແລ້ວນີ້ແມ່ນຄວາມເຊື່ອໃນພຣະເຈົ້າບໍ? ເມື່ອເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຕ້ອງປ່ອຍວາງທຸກສິ່ງໄວ້ກັບຄວາມເມດຕາຂອງພຣະເຈົ້າ ແລະ ເຊື່ອຟັງພາລະກິດທັງໝົດຂອງພຣະເຈົ້າ. ພຣະເຈົ້າໄດ້ກ່າວພຣະທຳຢ່າງຫຼວງຫຼາຍໃນພັນທະສັນຍາເດີມ, ມີພຣະທຳຂໍ້ໃດທີ່ເຈົ້າເຫັນວ່າຖືກບັນລຸຜົນດ້ວຍຕາຂອງເຈົ້າເອງ? ເຈົ້າສາມາດເວົ້າໄດ້ບໍວ່າພຣະເຢໂຮວາບໍ່ແມ່ນພຣະເຈົ້າທີ່ແທ້ຈິງ ເພາະເຈົ້າບໍ່ໄດ້ເຫັນສິ່ງນັ້ນ? ເຖິງແມ່ນວ່າພຣະທຳຫຼາຍຂໍ້ໄດ້ບັນລຸຜົນແລ້ວ, ມະນຸດກໍ່ບໍ່ສາມາດແນມເຫັນສິ່ງນັ້ນໄດ້ຢ່າງແຈ່ມແຈ້ງ ເພາະມະນຸດບໍ່ມີຄວາມຈິງ ແລະ ບໍ່ເຂົ້າໃຈຫຍັງເລີຍ. ບາງຄົນຢາກແລ່ນໜີ ເມື່ອພວກເຂົາຮູ້ສຶກວ່າພຣະທຳຂອງພຣະເຈົ້າບໍ່ໄດ້ຖືກບັນລຸຜົນ. ລອງເຮັດເບິ່ງ. ເບິ່ງວ່າເຈົ້າສາມາດແລ່ນໜີ ຫຼື ບໍ່. ເຖິງວ່າຈະໄດ້ແລ່ນໜີ, ເຈົ້າກໍ່ຍັງຈະກັບຄືນມາ. ພຣະເຈົ້າຄວບຄຸມເຈົ້າດ້ວຍພຣະທຳຂອງພຣະອົງ ແລະ ຖ້າເຈົ້າອອກຈາກຄຣິສຕະຈັກ ແລະ ພຣະທຳຂອງພຣະເຈົ້າ, ເຈົ້າກໍ່ຈະບໍ່ມີທາງມີຊີວິດຢູ່ໄດ້. ຖ້າເຈົ້າບໍ່ເຊື່ອໃນສິ່ງນີ້, ໃຫ້ເຈົ້າລອງເຮັດດ້ວຍຕົນເອງ, ເຈົ້າຄິດວ່າເຈົ້າສາມາດຈາກໄປແທ້ໆບໍ? ພຣະວິນຍານຂອງພຣະເຈົ້າຄວບຄຸມເຈົ້າ. ເຈົ້າບໍ່ສາມາດຈາກໄປໄດ້. ນີ້ແມ່ນບົດບັນຍັດປົກຄອງຂອງພຣະເຈົ້າ! ຖ້າບາງຄົນຢາກລອງ, ພວກເຂົາກໍ່ສາມາດເຮັດໄດ້! ເຈົ້າເວົ້າວ່າບຸກຄົນນີ້ບໍ່ແມ່ນພຣະເຈົ້າ, ສະນັ້ນ ລອງເຮັດບາບຕໍ່ພຣະອົງ ແລະ ເບິ່ງວ່າພຣະອົງຈະເຮັດແນວໃດ. ມັນເປັນໄປໄດ້ທີ່ເນື້ອໜັງຂອງເຈົ້າຍັງບໍ່ຕາຍ ແລະ ເຈົ້າຈະຍັງສາມາດລ້ຽງຕົນເອງ ແລະ ນຸ່ງຫົ່ມໃຫ້ຕົນເອງ, ແຕ່ໃນຈິດໃຈກໍ່ບໍ່ສາມາດທົນໄດ້; ເຈົ້າຈະຮູ້ສຶກກົດດັນ ແລະ ທໍລະມານ; ບໍ່ມີຫຍັງຈະເຈັບປວດໄປກວ່ານີ້ອີກແລ້ວ. ມະນຸດບໍ່ສາມາດທົນຢູ່ກັບຄວາມທໍລະມານ ແລະ ການທຳລາຍລ້າງທາງຈິດໃຈໄດ້, ບາງທີ ເຈົ້າສາມາດອົດກັ້ນ

ກັບຄວາມທົນທຸກຂອງເນື້ອໜັງໄດ້, ແຕ່ເຈົ້າບໍ່ສາມາດອົດກັ້ນກັບຄວາມກົດດັນທາງຈິດໃຈ ແລະ ຄວາມທໍລະມານທີ່ຍາວນານນັ້ນໄດ້ແທ້ໆ. ມື້ນີ້ ບາງຄົນເລີ່ມຄິດລົບ ເພາະພວກເຂົາບໍ່ສາມາດເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນໃດໆ, ແຕ່ບໍ່ມີໃຜກ້າແລ່ນໜີ ບໍ່ວ່າພວກເຂົາຈະຄິດລົບຫຼາຍພຽງໃດກໍ່ຕາມ ຍ້ອນພຣະເຈົ້າຄວບຄຸມມະນຸດດ້ວຍພຣະທຳຂອງພຣະອົງ. ເຖິງແມ່ນວ່າຈະບໍ່ມີການກຳເນີດຂອງຄວາມຈິງ ແຕ່ກໍ່ຍັງບໍ່ມີໃຜສາມາດໜີພົ້ນໄດ້. ສິ່ງເຫຼົ່ານີ້ບໍ່ແມ່ນການກະທຳຂອງພຣະເຈົ້າບໍ? ມື້ນີ້, ພຣະເຈົ້າໄດ້ມາເທິງແຜ່ນດິນໂລກເພື່ອສະໜອງຊີວິດໃຫ້ແກ່ມະນຸດ. ພຣະອົງບໍ່ໄດ້ຕົວະຍົວະເຈົ້າໂດຍສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນເພື່ອຮັບປະກັນຄວາມສຳພັນທີ່ສະຫງົບສຸກລະຫວ່າງພຣະເຈົ້າ ແລະ ມະນຸດຕາມທີ່ຜູ້ຄົນຈິນຕະນາການ. ທຸກຄົນທີ່ບໍ່ໄດ້ມີຄວາມສົນໃຈກ່ຽວກັບຊີວິດ ແລະ ໃສ່ໃຈໃນການເຮັດໃຫ້ພຣະເຈົ້າສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນແທນກໍ່ແມ່ນພວກຟາຣີຊາຍ! ແລ້ວມັນກໍ່ແມ່ນພວກຟາຣີຊາຍທີ່ໄດ້ຕອກຕະປູຄຶງພຣະເຢຊູໃສ່ໄມ້ກາງແຂນ. ຖ້າເຈົ້າວັດແທກພຣະເຈົ້າຕາມມຸມມອງຄວາມເຊື່ອໃນພຣະເຈົ້າຂອງເຈົ້າເອງ, ໂດຍເຊື່ອໃນພຣະເຈົ້າ ຖ້າພຣະທຳຂອງພຣະອົງບັນລຸຜົນ ແລະ ສົງໄສ ແລະ ເຖິງກັບໝິ່ນປະໝາດພຣະເຈົ້າຖ້າພຣະທຳເຫຼົ່ານັ້ນບໍ່ບັນລຸຜົນ, ແລ້ວເຈົ້າບໍ່ໄດ້ຕອກຕະປູຄຶງພຣະອົງໃສ່ໄມ້ກາງແຂນບໍ? ຄົນເຫຼົ່ານີ້ລະເລີຍຕໍ່ໜ້າທີ່ຂອງພວກເຂົາ ແລະ ມ່ວນຊື່ນກັບຄວາມສຸກສະບາຍຢ່າງໂລບມາກ!

ໃນອີກດ້ານໜຶ່ງ, ບັນຫາທີ່ໃຫຍ່ທີ່ສຸດກ່ຽວກັບມະນຸດກໍ່ຄືເຂົາບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ. ເຖິງແມ່ນວ່າທ່າທີຂອງມະນຸດບໍ່ແມ່ນທ່າທີຂອງການປະຕິເສດ, ມັນເປັນທ່າທີຂອງການສົງໄສ. ມະນຸດບໍ່ປະຕິເສດ, ແຕ່ເຂົາຍັງບໍ່ຍອມຮັບຮູ້ຢ່າງສົມບູນ. ຖ້າຄົນມີຄວາມຮູ້ຢ່າງລະອຽດກ່ຽວກັບພາລະກິດຂອງພຣະເຈົ້າ, ພວກເຂົາກໍ່ຈະບໍ່ແລ່ນໜີ. ອີກບັນຫາໜຶ່ງກໍ່ຄືມະນຸດບໍ່ຮູ້ຈັກຄວາມເປັນຈິງ. ມື້ນີ້, ແຕ່ລະຄົນໄດ້ມີສ່ວນຮ່ວມຢູ່ກັບພຣະທຳຂອງພຣະເຈົ້າ; ແນ່ນອນ, ໃນອະນາຄົດ ເຈົ້າບໍ່ຄວນຄິດທີ່ຈະຫຼຽວເບິ່ງໝາຍສຳຄັນ ແລະ ສິ່ງອັດສະຈັນ. ເຮົາຂໍເຈົ້າຢ່າງຊັດເຈນວ່າ: ໃນຂັ້ນຕອນປັດຈຸບັນ, ສິ່ງດຽວທີ່ເຈົ້າສາມາດເບິ່ງເຫັນຄືພຣະທຳຂອງພຣະເຈົ້າ ແລະ ເຖິງແມ່ນວ່າບໍ່ມີຂໍ້ແທ້ຈິງໃດໆກໍ່ຕາມ, ຊີວິດຂອງພຣະເຈົ້າຍັງສາມາດເກີດຂຶ້ນໃນມະນຸດ. ມັນຄືພາລະກິດນີ້ທີ່ເປັນພາລະກິດຫຼັກໃນອານາຈັກພັນປີ ແລະ ຖ້າເຈົ້າບໍ່ສາມາດຮັບຮູ້ພາລະກິດນີ້ໄດ້, ແລ້ວເຈົ້າກໍ່ຈະເລີ່ມອ່ອນແອ ແລະ ລົ້ມລົງ; ເຈົ້າຈະຕົກຢູ່ໃນທ່າມກາງການທົດລອງ ແລະ ສິ່ງທີ່ຮ້າຍແຮງໄປກວ່ານັ້ນກໍ່ຄື ເຈົ້າຈະຖືກຊາຕານຈັບເປັນຊະເລີຍ. ພຣະເຈົ້າໄດ້ມາໃນແຜ່ນດິນໂລກເພື່ອກ່າວພຣະທຳຂອງພຣະອົງເປັນຫຼັກ; ສິ່ງທີ່ເຈົ້າພົວພັນນຳແມ່ນພຣະທຳຂອງພຣະເຈົ້າ, ສິ່ງທີ່ເຈົ້າເຫັນແມ່ນພຣະທຳຂອງພຣະເຈົ້າ, ສິ່ງທີ່ເຈົ້າໄດ້ຍິນແມ່ນພຣະທຳຂອງພຣະເຈົ້າ, ສິ່ງທີ່ເຈົ້າປະຕິບັດຕາມແມ່ນພຣະທຳຂອງພຣະເຈົ້າ, ສິ່ງທີ່ເຈົ້າປະສົບແມ່ນພຣະທຳຂອງພຣະເຈົ້າ ແລະ ການບັງເກີດເປັນມະນຸດໃນຄັ້ງນີ້ຂອງພຣະເຈົ້າໃຊ້ພຣະທຳເພື່ອເຮັດໃຫ້ມະນຸດສົມບູນແບບເປັນຫຼັກ. ພຣະອົງບໍ່ໄດ້ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ໂດຍພິເສດແລ້ວ ພຣະອົງບໍ່ໄດ້ເຮັດພາລະກິດທີ່ພຣະເຢຊູໄດ້ເຮັດໃນອະດີດ. ເຖິງແມ່ນວ່າພຣະອົງທັງສອງເປັນພຣະເຈົ້າ ແລະ ເປັນເນື້ອໜັງ, ພັນທະກິດຂອງພຣະອົງທັງສອງນັ້ນບໍ່ຄືກັນ. ເມື່ອພຣະເຢຊູມາ, ພຣະອົງຍັງໄດ້ເຮັດສ່ວນໜຶ່ງ

ໃນພາລະກິດພຣະເຈົ້າ ແລະ ກ່າວພຣະທຳບາງຂໍ້, ແຕ່ແມ່ນຫຍັງຄືພາລະກິດຫຼັກທີ່ພຣະອົງໄດ້ເຮັດສຳເລັດ? ສິ່ງທີ່ພຣະອົງໄດ້ເຮັດສຳເລັດຫຼັກໆຄືພາລະກິດຂອງການຖືກຄຶງເທິງໄມ້ກາງແຂນ. ພຣະອົງໄດ້ກາຍເປັນລັກສະນະຂອງເນື້ອໜັງທີ່ຜິດບາບເພື່ອສຳເລັດພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນ ແລະ ໄຖ່ມະນຸດຊາດທັງປວງຈາກຄວາມຜິດບາບ ແລະ ເພື່ອເຫັນແກ່ຄວາມຜິດບາບຂອງມະນຸດຊາດທັງປວງ ພຣະອົງຈຶ່ງເຮັດໜ້າທີ່ເປັນເຄື່ອງບູຊາແທນຄວາມຜິດບາບ. ນີ້ແມ່ນພາລະກິດຫຼັກທີ່ພຣະອົງໄດ້ສຳເລັດ. ໃນທີ່ສຸດແລ້ວ ພຣະອົງໄດ້ຈັດຕຽມເສັ້ນທາງແຫ່ງໄມ້ກາງແຂນເພື່ອຊີ້ນຳຄົນທີ່ມາຕາມຫຼັງ. ເມື່ອພຣະເຢຊູມາ, ມັນແມ່ນເພື່ອສຳເລັດພາລະກິດແຫ່ງການໄຖ່ບາບເປັນຫຼັກ. ພຣະອົງໄດ້ໄຖ່ບາບມະນຸດຊາດທັງປວງ ແລະ ໄດ້ນຳເອົາຂ່າວປະເສີດແຫ່ງອານາຈັກສະຫວັນມາສູ່ມະນຸດ ແລະ ຍິ່ງໄປກວ່ານັ້ນ ພຣະອົງຍັງໄດ້ນຳເສັ້ນທາງໄປສູ່ອານາຈັກສະຫວັນອີກດ້ວຍ. ຜົນຕາມມາກໍ່ຄື ທຸກຄົນທີ່ມາຕາມຫຼັງພຣະອົງໄດ້ເວົ້າວ່າ “ພວກເຮົາຄວນຍ່າງຕາມເສັ້ນທາງແຫ່ງໄມ້ກາງແຂນ ແລະ ເສຍສະຫຼະຕົນເອງເພື່ອໄມ້ກາງແຂນ”. ແນ່ນອນ ໃນເບື້ອງຕົ້ນ ພຣະເຢຊູຍັງໄດ້ເຮັດພາລະກິດອີກບາງຢ່າງ ແລະ ກ່າວພຣະທຳບາງຂໍ້ເພື່ອເຮັດໃຫ້ມະນຸດກັບໃຈ ແລະ ສາລະພາບຄວາມຜິດບາບຂອງເຂົາ. ແຕ່ພັນທະກິດຂອງພຣະອົງຍັງເປັນການຖືກຄຶງເທິງໄມ້ກາງແຂນ ແລະ ສາມປີເຄິ່ງທີ່ພຣະອົງໃຊ້ໃນການເທດສະໜາຄືການກະກຽມສຳລັບການຖືກຄຶງເທິງໄມ້ກາງແຂນທີ່ຕາມມາຫຼັງຈາກນັ້ນ. ຫຼາຍຄັ້ງທີ່ພຣະເຢຊູອະທິຖານແມ່ນເພື່ອເຫັນແກ່ການຖືກຄຶງເທິງໄມ້ກາງແຂນ. ຊີວິດຂອງມະນຸດທຳມະດາທີ່ພຣະອົງມີ ແລະ ເວລາສາມສິບສາມປີເຄິ່ງທີ່ພຣະອົງໄດ້ດຳລົງຊີວິດຢູ່ເທິງແຜ່ນດິນໂລກແມ່ນເພື່ອເຫັນແກ່ການສຳເລັດພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນ; ສິ່ງເຫຼົ່ານັ້ນແມ່ນເພື່ອເຮັດໃຫ້ພຣະອົງມີກຳລັງທີ່ຈະດຳເນີນພາລະກິດນີ້ ເຊິ່ງເປັນພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນທີ່ພຣະເຈົ້າໄດ້ຝາກຝັງໃຫ້ແກ່ພຣະອົງ. ມື້ນີ້ ແມ່ນຫຍັງຄືພາລະກິດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດຈະເຮັດໃຫ້ສຳເລັດ? ມື້ນີ້, ພຣະເຈົ້າໄດ້ກາຍມາເປັນເນື້ອໜັງເພື່ອສຳເລັດພາລະກິດຂອງ “ພຣະທຳທີ່ປາກົດໃນເນື້ອໜັງ” ເປັນຫຼັກ, ນຳໃຊ້ພຣະທຳເພື່ອເຮັດໃຫ້ມະນຸດສົມບູນແບບ ແລະ ເຮັດໃຫ້ມະນຸດຍອມຮັບການຈັດການຈາກພຣະທຳ ແລະ ການຫຼໍ່ຫຼອມຈາກພຣະທຳ. ໃນພຣະທຳຂອງພຣະອົງ ພຣະອົງເຮັດໃຫ້ເຈົ້າໄດ້ຮັບການຈັດກຽມ ແລະ ຮັບເອົາຊີວິດ; ໃນພຣະທຳຂອງພຣະອົງ, ເຈົ້າຈະເຫັນພາລະກິດ ແລະ ການກະທຳຂອງພຣະອົງ. ພຣະເຈົ້າໃຊ້ພຣະທຳເພື່ອຕີສອນ ແລະ ຫຼໍ່ຫຼອມເຈົ້າ ແລະ ດ້ວຍເຫດນັ້ນ ຖ້າເຈົ້າທົນທຸກກັບຄວາມຍາກລຳບາກ ມັນຍັງເປັນຍ້ອນພຣະທຳຂອງພຣະເຈົ້າ. ມື້ນີ້ ພຣະເຈົ້າບໍ່ໄດ້ເຮັດພາລະກິດດ້ວຍຂໍ້ແທ້ຈິງ, ແຕ່ໃຊ້ພຣະທຳ. ພຽງແຕ່ຫຼັງຈາກທີ່ພຣະທຳຂອງພຣະອົງໄດ້ມາເຖິງເຈົ້າ, ພຣະວິນຍານບໍລິສຸດຈຶ່ງສາມາດປະຕິບັດພາລະກິດພາຍໃນຕົວເຈົ້າ ແລະ ເຮັດໃຫ້ເຈົ້າອົດທົນກັບຄວາມເຈັບປວດ ຫຼື ຮູ້ສຶກເຖິງຄວາມຫວານຊື່ນ. ມີພຽງແຕ່ພຣະທຳຂອງພຣະເຈົ້າເທົ່ານັ້ນທີ່ສາມາດພາເຈົ້າໄປສູ່ຄວາມເປັນຈິງໄດ້ ແລະ ມີພຽງແຕ່ພຣະທຳຂອງພຣະເຈົ້າເທົ່ານັ້ນທີ່ສາມາດເຮັດໃຫ້ເຈົ້າສົມບູນແບບໄດ້. ແລ້ວດ້ວຍເຫດນັ້ນ ຢ່າງໜ້ອຍທີ່ສຸດ ເຈົ້າກໍ່ຕ້ອງເຂົ້າໃຈໃນສິ່ງນີ້: ພາລະກິດທີ່ພຣະເຈົ້າປະຕິບັດໃນຍຸກສຸດທ້າຍຄືການໃຊ້ພຣະທຳຂອງພຣະອົງເພື່ອເຮັດໃຫ້ທຸກຄົນສົມບູນ ແລະ ເພື່ອນຳພາ

ມະນຸດເປັນຫຼັກ. ພາລະກິດທັງໝົດທີ່ພຣະອົງກະທຳແມ່ນຜ່ານທາງພຣະທຳ; ພຣະອົງບໍ່ໄດ້ໃຊ້ຂໍ້ແທ້ຈິງເພື່ອຕີສອນເຈົ້າ. ມີບາງເວລາທີ່ບາງຄົນຕໍ່ຕ້ານພຣະເຈົ້າ. ພຣະເຈົ້າບໍ່ເຮັດໃຫ້ເຈົ້າຮູ້ສຶກບໍ່ສະບາຍໃຈຫຼາຍ, ເນື້ອໜັງຂອງເຈົ້າບໍ່ໄດ້ຖືກຕີສອນ ຫຼື ເຈົ້າບໍ່ໄດ້ທົນທຸກກັບຄວາມຍາກລຳບາກ, ແຕ່ທັນທີທີ່ພຣະທຳຂອງພຣະເຈົ້າມາເຖິງເຈົ້າ ແລະ ຫຼໍ່ຫຼອມເຈົ້າ, ເຈົ້າກໍ່ບໍ່ສາມາດທົນມັນໄດ້. ມັນບໍ່ໄດ້ເປັນແບບນັ້ນບໍ? ໃນລະຫວ່າງເວລາຂອງຜູ້ໃຫ້ບໍລິການ, ພຣະເຈົ້າໄດ້ກ່າວເພື່ອໂຍນມະນຸດລົງສູ່ຂຸມເລິກ. ມະນຸດໄດ້ລົງໄປຮອດຂຸມເລິກແທ້ໆບໍ? ມີພຽງແຕ່ຜ່ານການໃຊ້ພຣະທຳເພື່ອຫຼໍ່ຫຼອມມະນຸດເທົ່ານັ້ນ, ມະນຸດຈຶ່ງເຂົ້າສູ່ຂຸມເລິກ. ແລ້ວດ້ວຍເຫດນັ້ນ, ໃນລະຫວ່າງຍຸກສຸດທ້າຍ, ເມື່ອພຣະເຈົ້າກາຍມາເປັນເນື້ອໜັງ, ພຣະອົງໃຊ້ພຣະທຳເພື່ອເຮັດໃຫ້ທຸກສິ່ງສຳເລັດ ແລະ ເຮັດໃຫ້ທຸກສິ່ງແຈ່ມແຈ້ງຂຶ້ນເປັນຫຼັກ. ມີພຽງແຕ່ໃນພຣະທຳຂອງພຣະອົງເທົ່ານັ້ນ ເຈົ້າຈຶ່ງຈະສາມາດເຫັນໄດ້ໃນສິ່ງທີ່ພຣະອົງເປັນ; ມີພຽງແຕ່ໃນພຣະທຳຂອງພຣະອົງເທົ່ານັ້ນ ເຈົ້າຈຶ່ງຈະສາມາດເຫັນໄດ້ວ່າພຣະອົງເອງເປັນພຣະເຈົ້າ. ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດລົງມາເທິງແຜ່ນດິນໂລກ, ພຣະອົງບໍ່ໄດ້ປະຕິບັດພາລະກິດອື່ນ ນອກຈາກກ່າວພຣະທຳ, ດັ່ງນັ້ນ ບໍ່ຈຳເປັນຕ້ອງມີຂໍ້ແທ້ຈິງ; ພຣະທຳເທົ່ານັ້ນກໍ່ພຽງພໍແລ້ວ. ນັ້ນກໍຍ້ອນວ່າ ພຣະອົງໄດ້ມາເພື່ອປະຕິບັດພາລະກິດນີ້ເປັນຫຼັກ, ເພື່ອເຮັດໃຫ້ມະນຸດເບິ່ງເຫັນລິດອຳນາດ ແລະ ອຳນາດສູງສຸດຂອງພຣະອົງໃນພຣະທຳຂອງພຣະອົງ, ເພື່ອເຮັດໃຫ້ມະນຸດເຫັນໃນພຣະທຳຂອງພຣະອົງວ່າ ພຣະອົງປົກປິດຕົນເອງຢ່າງຖ່ອມຕົວແນວໃດ ແລະ ເພື່ອເຮັດໃຫ້ມະນຸດຮູ້ຈັກເຖິງຄວາມສົມບູນຂອງພຣະອົງໃນພຣະທຳຂອງພຣະອົງ. ທຸກສິ່ງທີ່ພຣະອົງມີ ແລະ ທຸກສິ່ງທີ່ພຣະອົງເປັນແມ່ນຢູ່ໃນພຣະທຳຂອງພຣະອົງ. ສະຕິປັນຍາ ແລະ ຄວາມອັດສະຈັນຂອງພຣະອົງແມ່ນຢູ່ໃນພຣະທຳຂອງພຣະອົງ. ສິ່ງນີ້ໄດ້ເຮັດໃຫ້ເຈົ້າເຫັນຫຼາຍວິທີການທີ່ພຣະເຈົ້າກ່າວພຣະທຳຂອງພຣະອົງ. ພາລະກິດສ່ວນໃຫຍ່ຂອງພຣະເຈົ້າໃນລະຫວ່າງເວລານີ້ຄືການສະໜອງ, ການເປີດເຜີຍ ແລະ ການພົວພັນກັບມະນຸດ. ພຣະອົງບໍ່ໄດ້ສາບແຊ່ງຄົນແມ່ນແຕ່ໜ້ອຍດຽວ ແລະ ເຖິງແມ່ນວ່າພຣະອົງສາບແຊ່ງ, ພຣະອົງກໍ່ສາບແຊ່ງຜ່ານຜ່ານພຣະທຳ. ແລ້ວດ້ວຍເຫດນັ້ນ, ໃນຍຸກນີ້ທີ່ພຣະເຈົ້າກາຍມາເປັນເນື້ອໜັງ, ຢ່າພະຍາຍາມເບິ່ງພຣະເຈົ້າຮັກສາຄົນເຈັບປ່ວຍ ແລະ ຂັບໄລ່ມານຮ້າຍອີກ ແລະ ໃຫ້ເຊົາຊອກຫາໝາຍສຳຄັນຢູ່ເລື້ອຍໆ. ບໍ່ມີປະໂຫຍດຫຍັງເລີຍ! ໝາຍສຳຄັນເຫຼົ່ານັ້ນບໍ່ສາມາດເຮັດໃຫ້ມະນຸດສົມບູບແບບໄດ້! ເວົ້າຢ່າງຈະແຈ້ງກໍ່ຄື: ມື້ນີ້, ພຣະເຈົ້າທີ່ແທ້ຈິງໃນເນື້ອໜັງບໍ່ໄດ້ເຮັດຫຍັງ; ພຣະອົງພຽງແຕ່ເວົ້າ. ນີ້ແມ່ນຄວາມຈິງ! ພຣະອົງໃຊ້ພຣະທຳເພື່ອເຮັດໃຫ້ເຈົ້າສົມບູນແບບ ແລະ ໃຊ້ພຣະທຳເພື່ອລ້ຽງດູ ແລະ ຫົດນໍ້າເຈົ້າ. ພຣະອົງຍັງໃຊ້ພຣະທຳເພື່ອປະຕິບັດພາລະກິດ ແລະ ພຣະອົງໃຊ້ພຣະທຳແທນຂໍ້ແທ້ຈິງເພື່ອເຮັດໃຫ້ເຈົ້າຮູ້ຈັກຄວາມເປັນຈິງຂອງພຣະອົງ. ຖ້າເຈົ້າສາມາດຮັບຮູ້ພາລະກິດລັກສະນະນີ້ຂອງພຣະເຈົ້າ, ແລ້ວມັນກໍ່ຍາກທີ່ຈະຄິດລົບ. ແທນທີ່ຈະສົນໃຈກັບສິ່ງທີ່ບໍ່ດີ, ເຈົ້າຄວນສົນໃຈກັບສິ່ງທີ່ດີ ເຊິ່ງໝາຍຄວາມວ່າ ບໍ່ວ່າພຣະທຳຂອງພຣະເຈົ້າຈະບັນລຸຜົນ ຫຼື ບໍ່ກໍ່ຕາມ ຫຼື ບໍ່ວ່າຈະເກີດມີຂໍ້ແທ້ຈິງ ຫຼື ບໍ່ກໍ່ຕາມ, ພຣະເຈົ້າເຮັດໃຫ້ມະນຸດຮັບເອົາຊີວິດຈາກພຣະທຳຂອງພຣະອົງ ແລະ ນີ້ຄືໝາຍສຳຄັນທີ່ຍິ່ງໃຫຍ່ທີ່ສຸດໃນບັນດາໝາຍສຳຄັນທັງປວງ ແລະ ຍິ່ງໄປກວ່ານັ້ນ ມັນຄືຂໍ້ແທ້ຈິງທີ່ບໍ່ສາມາດໂຕ້ຖຽງໄດ້. ນີ້ແມ່ນຫຼັກຖານທີ່ດີ

ທີ່ສຸດທີ່ຈະຮູ້ຈັກພຣະເຈົ້າ ແລະ ມັນຍິ່ງເປັນໝາຍສຳຄັນທີ່ຍິ່ງໃຫຍ່ກວ່າໝາຍສຳຄັນໃດໆ. ມີພຽງແຕ່ພຣະທຳເຫຼົ່ານີ້ເທົ່ານັ້ນທີ່ສາມາດເຮັດໃຫ້ມະນຸດສົມບູນແບບໄດ້.

ທັນທີທີ່ຍຸກແຫ່ງລາຊະອານາຈັກໄດ້ເລີ່ມຕົ້ນຂຶ້ນ, ພຣະເຈົ້າກໍເລີ່ມເປີດເຜີຍພຣະທຳຂອງພຣະອົງ. ໃນອະນາຄົດ, ພຣະທຳເຫຼົ່ານີ້ຈະບັນລຸຜົນເທື່ອລະໜ້ອຍ ແລະ ໃນເວລານັ້ນ, ມະນຸດກໍ່ຈະເຕີບໂຕມີຊີວິດ. ການທີ່ພຣະເຈົ້າໃຊ້ພຣະທຳເພື່ອເປີດເຜີຍອຸປະນິໄສທີ່ເສື່ອມຊາມຂອງມະນຸດກໍ່ເປັນຈິງຍິ່ງຂຶ້ນ ແລະ ຈຳເປັນຍິ່ງຂຶ້ນ ແລະ ພຣະອົງບໍ່ໄດ້ໃຊ້ຫຍັງນອກຈາກພຣະທຳເພື່ອປະຕິບັດພາລະກິດຂອງພຣະອົງເພື່ອເຮັດໃຫ້ຄວາມເຊື່ອຂອງມະນຸດສົມບູນແບບ, ຍ້ອນປັດຈຸບັນຄືຍຸກແຫ່ງພຣະທຳ ແລະ ມັນຈຳເປັນຕ້ອງມີຄວາມເຊື່ອ, ຄວາມເດັດດ່ຽວ ແລະ ການຮ່ວມມືຂອງມະນຸດ. ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດໃນຍຸກສຸດທ້າຍແມ່ນການໃຊ້ພຣະທຳຂອງພຣະອົງເພື່ອຮັບໃຊ້ ແລະ ສະໜອງໃຫ້ແກ່ມະນຸດ. ພຽງແຕ່ຫຼັງຈາກທີ່ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ສຳເລັດການກ່າວພຣະທຳຂອງພຣະອົງເທົ່ານັ້ນ ພຣະທຳເຫຼົ່ານັ້ນຈຶ່ງຈະບັນລຸຜົນ. ໃນລະຫວ່າງເວລາທີ່ພຣະອົງກ່າວ, ພຣະທຳຂອງພຣະອົງຍັງບໍ່ທັນບັນລຸຜົນ, ເພາະເມື່ອພຣະອົງຢູ່ໃນຂັ້ນຕອນຂອງເນື້ອໜັງ, ພຣະທຳຂອງພຣະອົງບໍ່ສາມາດບັນລຸຜົນ. ນີ້ກໍ່ເພື່ອໃຫ້ມະນຸດໄດ້ເຫັນວ່າພຣະເຈົ້າເປັນເນື້ອໜັງ ແລະ ບໍ່ແມ່ນພຣະວິນຍານ; ເພື່ອວ່າມະນຸດອາດໄດ້ເຫັນຄວາມເປັນຈິງຂອງພຣະເຈົ້າດ້ວຍຕາຂອງເຂົາເອງ. ໃນມື້ທີ່ພາລະກິດຂອງພຣະອົງສຳເລັດ, ເມື່ອພຣະທຳທັງໝົດທີ່ພຣະອົງຄວນກ່າວເທິງແຜ່ນດິນໂລກໄດ້ຖືກກ່າວອອກແລ້ວ, ພຣະທຳຂອງພຣະອົງກໍ່ຈະເລີ່ມບັນລຸຜົນ. ຕອນນີ້ບໍ່ແມ່ນຍຸກແຫ່ງການບັນລຸຜົນຕາມພຣະທຳຂອງພຣະເຈົ້າ, ເພາະພຣະອົງຍັງບໍ່ທັນສຳເລັດການກ່າວພຣະທຳຂອງພຣະອົງ. ດັ່ງນັ້ນ, ເມື່ອເຈົ້າເຫັນວ່າພຣະອົງຍັງກ່າວພຣະທຳຂອງພຣະອົງເທິງແຜ່ນດິນໂລກ, ຢ່າລໍຖ້າການບັນລຸຜົນຕາມພຣະທຳຂອງພຣະອົງ; ເມື່ອພຣະເຈົ້າຢຸດກ່າວພຣະທຳຂອງພຣະອົງ ແລະ ເມື່ອພາລະກິດຂອງພຣະອົງເທິງແຜ່ນດິນໂລກໄດ້ສຳເລັດລົງນັ້ນຈະເປັນເວລາທີ່ພຣະທຳຂອງພຣະອົງເລີ່ມບັນລຸຜົນ. ໃນພຣະທຳທີ່ພຣະອົງກ່າວເທິງແຜ່ນດິນໂລກ, ໃນດ້ານໜຶ່ງແມ່ນມີການສະໜອງຊີວິດ ແລະ ໃນອີກດ້ານໜຶ່ງແມ່ນມີຄຳທຳນາຍ ເຊິ່ງເປັນຄຳທຳນາຍກ່ຽວກັບສິ່ງທີ່ຈະເກີດຂຶ້ນ, ສິ່ງທີ່ຈະສຳເລັດລົງ ແລະ ສິ່ງທີ່ຍັງບໍ່ທັນຖືກເຮັດໃຫ້ສຳເລັດເທື່ອ. ຍັງມີຄຳທຳນາຍໃນພຣະທຳຂອງພຣະເຢຊູ. ໃນດ້ານໜຶ່ງ ພຣະອົງໄດ້ສະໜອງຊີວິດ ແລະ ໃນອີກດ້ານໜຶ່ງພຣະອົງໄດ້ກ່າວຄຳທຳນາຍ. ມື້ນີ້, ບໍ່ມີການເວົ້າເຖິງການປະຕິບັດພຣະທຳ ແລະ ຂໍ້ແທ້ຈິງ, ເພາະມີຄວາມແຕກຕ່າງຫຼາຍເກີນໄປລະຫວ່າງສິ່ງທີ່ຕາຂອງມະນຸດເອງສາມາດເບິ່ງເຫັນໄດ້ ແລະ ສິ່ງທີ່ພຣະເຈົ້າເຮັດສຳເລັດ. ມັນສາມາດເວົ້າໄດ້ວ່າ ທັນທີທີ່ພາລະກິດຂອງພຣະເຈົ້າໄດ້ສຳເລັດລົງ, ພຣະທຳຂອງພຣະອົງກໍ່ຈະບັນລຸຜົນ ແລະ ຂໍ້ແທ້ຈິງກໍ່ຈະເກີດຂຶ້ນຫຼັງຈາກພຣະທຳ. ໃນລະຫວ່າງຍຸກສຸດທ້າຍ, ພຣະເຈົ້າທີ່ບັງເກີດເປັນມະນຸດຈະປະຕິບັດພັນທະກິດແຫ່ງພຣະທຳເທິງແຜ່ນດິນໂລກ ແລະ ໃນການປະຕິບັດພັນທະກິດແຫ່ງພຣະທຳ ພຣະອົງພຽງແຕ່ກ່າວພຣະທຳ ແລະ ບໍ່ໄດ້ໃສ່ໃຈເລື່ອງອື່ນ. ທັນທີທີ່ພາລະກິດຂອງພຣະເຈົ້າປ່ຽນໄປ, ພຣະທຳຂອງພຣະອົງກໍ່ຈະເລີ່ມບັນລຸຜົນ. ມື້ນີ້, ພຣະທຳແມ່ນຖືກນຳໃຊ້ເພື່ອເຮັດໃຫ້ເຈົ້າສົມບູນແບບກ່ອນ; ເມື່ອພຣະອົງໄດ້ຮັບສະຫງ່າລາສີທົ່ວຈັກກະວານທັງປວງ,

ພາລະກິດຂອງພຣະອົງກໍ່ຈະສົມບູນ ນັ້ນກໍ່ຄື ພຣະທຳທັງໝົດທີ່ຄວນກ່າວກໍ່ຈະໄດ້ຖືກກ່າວ ແລະ ພຣະທຳທັງໝົດຈະກາຍມາເປັນຂໍ້ແທ້ຈິງ. ພຣະເຈົ້າໄດ້ມາເທິງແຜ່ນດິນໂລກໃນລະຫວ່າງຍຸກສຸດທ້າຍ ເພື່ອປະຕິບັດພັນທະກິດແຫ່ງພຣະທຳ ເພື່ອວ່າມະນຸດຊາດອາດຮູ້ຈັກພຣະອົງ ແລະ ເພື່ອວ່າມະນຸດຊາດອາດເຫັນສິ່ງທີ່ພຣະອົງເປັນ ແລະ ເຫັນເຖິງສະຕິປັນຍາຂອງພຣະອົງ ແລະ ການກະທຳອັນອັດສະຈັນທັງໝົດຂອງພຣະອົງຈາກພຣະທຳຂອງພຣະອົງ. ໃນຍຸກແຫ່ງລາຊະອານາຈັກ, ພຣະເຈົ້າໃຊ້ພຣະທຳເພື່ອເອົາຊະນະມະນຸດຊາດທັງປວງເປັນຫຼັກ. ໃນອະນາຄົດ, ພຣະທຳຂອງພຣະອົງຈະມາເຖິງທຸກສາສະໜາ, ທຸກຂະແໜງການ, ທຸກຊາດ ແລະ ທຸກນິກາຍ. ພຣະເຈົ້າໃຊ້ພຣະທຳເພື່ອເອົາຊະນະ, ເຮັດໃຫ້ມະນຸດທຸກຄົນເຫັນວ່າພຣະທຳຂອງພຣະອົງມີສິດອຳນາດ ແລະ ຄວາມຍິ່ງໃຫຍ່ ແລ້ວດ້ວຍເຫດນັ້ນ ມື້ນີ້ພວກເຈົ້າພຽງແຕ່ຜະເຊີນໜ້າກັບພຣະທຳຂອງພຣະເຈົ້າເທົ່ານັ້ນ.

ພຣະທຳທີ່ພຣະເຈົ້າໄດ້ກ່າວໃນຍຸກນີ້ແມ່ນແຕກຕ່າງຈາກພຣະທຳທີ່ໄດ້ກ່າວໃນຍຸກແຫ່ງພຣະບັນຍັດ ແລະ ດ້ວຍເຫດນັ້ນ ພຣະທຳດັ່ງກ່າວກໍ່ແຕກຕ່າງຈາກພຣະທຳທີ່ໄດ້ກ່າວໃນຍຸກແຫ່ງພຣະຄຸນເຊັ່ນກັນ. ໃນຍຸກແຫ່ງພຣະຄຸນ, ພຣະເຈົ້າບໍ່ໄດ້ເຮັດພາລະກິດແຫ່ງພຣະທຳ, ພຽງແຕ່ບັນລະຍາຍການຖືກຄຶງເທິງໄມ້ກາງແຂນເພື່ອໄຖ່ບາບມະນຸດຊາດທັງປວງ. ພຣະຄຳພີພຽງແຕ່ອະທິບາຍວ່າເປັນຫຍັງພຣະເຢຊູຈຶ່ງຖືກຄຶງເທິງໄມ້ກາງແຂນ ແລະ ຄວາມທົນທຸກທີ່ພຣະອົງໄດ້ຮັບເທິງໄມ້ກາງແຂນ ແລະ ວິທີທີ່ມະນຸດຄວນຖືກຄຶງເທິງໄມ້ກາງແຂນເພື່ອພຣະເຈົ້າ. ໃນຍຸກນັ້ນ, ພາລະກິດທັງໝົດທີ່ພຣະເຈົ້າໄດ້ກະທຳແມ່ນເນັ້ນໃສ່ການຖືກຄຶງເທິງໄມ້ກາງແຂນ. ໃນຍຸກແຫ່ງລາຊະອານາຈັກ, ພຣະເຈົ້າທີ່ບັງເກີດເປັນມະນຸດກ່າວພຣະທຳເພື່ອເອົາຊະນະທຸກຄົນທີ່ເຊື່ອໃນພຣະອົງ. ນີ້ຄື “ການທີ່ພຣະທຳປາກົດໃນເນື້ອໜັງ”; ພຣະເຈົ້າໄດ້ມາໃນລະຫວ່າງຍຸກສຸດທ້າຍເພື່ອປະຕິບັດພາລະກິດນີ້ ເຊິ່ງໝາຍຄວາມວ່າ ພຣະອົງໄດ້ມາເພື່ອສຳເລັດຄວາມໝາຍທີ່ແທ້ຈິງຂອງການທີ່ພຣະທຳປາກົດໃນເນື້ອໜັງ. ພຣະອົງພຽງແຕ່ກ່າວພຣະທຳເທົ່ານັ້ນ ແລະ ເກືອບບໍ່ມີການສະແດງຂໍ້ແທ້ຈິງເລີຍ. ນີ້ຄືແກ່ນແທ້ທີ່ແທ້ຈິງຂອງການທີ່ພຣະທຳປາກົດໃນເນື້ອໜັງ ແລະ ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດກ່າວພຣະທຳຂອງພຣະອົງ ນີ້ຄືການປາກົດຕົວຂອງພຣະທຳໃນເນື້ອໜັງ ແລະ ເປັນການທີ່ພຣະທຳເຂົ້າມາໃນເນື້ອໜັງ. “ໃນຕົ້ນເດີມນັ້ນຊົງເປັນພຣະທຳຢູ່ແລ້ວ ແລະ ພຣະທຳຊົງຢູ່ກັບພຣະເຈົ້າ ແລະ ພຣະທຳຊົງເປັນພຣະເຈົ້າ ແລະ ພຣະທຳຊົງບັງເກີດເປັນມະນຸດ”. ນີ້ (ພາລະກິດແຫ່ງການປາກົດຕົວຂອງພຣະທຳໃນເນື້ອໜັງ) ຄືແມ່ນພາລະກິດທີ່ພຣະເຈົ້າຈະສຳເລັດໃນຍຸກສຸດທ້າຍ ແລະ ເປັນບົດສຸດທ້າຍຂອງແຜນການຄຸ້ມຄອງທັງໝົດຂອງພຣະອົງ ແລ້ວດ້ວຍເຫດນັ້ນພຣະເຈົ້າຕ້ອງໄດ້ມາເທິງແຜ່ນດິນໂລກ ແລະ ສຳແດງພຣະທຳຂອງພຣະອົງໃນເນື້ອໜັງ. ນັ້ນຄືສິ່ງທີ່ໄດ້ສຳເລັດໃນມື້ນີ້, ສິ່ງທີ່ຈະສຳເລັດໃນອະນາຄົດ, ສິ່ງທີ່ພຣະເຈົ້າຈະເຮັດໃຫ້ສຳເລັດ, ຈຸດໝາຍປາຍທາງສຸດທ້າຍຂອງມະນຸດ, ຄົນທີ່ຈະຖືກຊ່ວຍໃຫ້ລອດພົ້ນ, ຄົນທີ່ຈະຖືກທຳລາຍ ແລະ ອື່ນໆອີກ, ພາລະກິດທັງໝົດນີ້ທີ່ຄວນບັນລຸໃນທີ່ສຸດກໍ່ລ້ວນແລ້ວແຕ່ຖືກລະບຸໄວ້ຢ່າງຊັດເຈນແລ້ວ ແລະ ທັງໝົດນັ້ນແມ່ນເພື່ອບັນລຸຄວາມໝາຍທີ່ແທ້ຈິງຂອງການທີ່ພຣະທຳປາກົດໃນເນື້ອໜັງ. ບົດບັນຍັດບໍລິຫານ ແລະ ລັດຖະທຳມະນູນທີ່ໄດ້ອອກກ່ອນໜ້ານີ້, ບັນດາຜູ້ທີ່ຈະ

ຖືກທຳລາຍ, ບັນດາຜູ້ທີ່ຈະເຂົ້າໄປສູ່ການພັກຜ່ອນ ພຣະທຳທັງໝົດເຫຼົ່ານີ້ຕ້ອງບັນລຸຜົນ. ນີ້ແມ່ນພາລະກິດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ສຳເລັດເປັນຫຼັກໃນລະຫວ່າງຍຸກສຸດທ້າຍ. ພຣະອົງເຮັດໃຫ້ຜູ້ຄົນເຂົ້າໃຈວ່າ ບັນດາຜູ້ທີ່ພຣະເຈົ້າໄດ້ກຳນົດໄວ້ລ່ວງໜ້ານັ້ນຢູ່ໃສ ແລະ ບັນດາຜູ້ທີ່ພຣະເຈົ້າບໍ່ໄດ້ກຳນົດໄວ້ລ່ວງໜ້ານັ້ນຢູ່ໃສ, ວິທີທີ່ຜູ້ຄົນ ແລະ ລູກຊາຍຂອງພຣະອົງຈະຖືກຈັດປະເພດ, ແມ່ນຫຍັງຈະເກີດຂຶ້ນກັບອິດສະຣາເອນ, ແມ່ນຫຍັງຈະເກີດຂຶ້ນກັບເອຢິບ, ໃນອະນາຄົດ, ພຣະທຳເຫຼົ່ານີ້ທຸກຂໍ້ຈະບັນລຸຜົນ. ຄວາມໄວຂອງພາລະກິດພຣະເຈົ້າກຳລັງເພີ່ມຂຶ້ນ. ພຣະເຈົ້າໃຊ້ພຣະທຳເປັນວິທີການເພື່ອເປີດເຜີຍໃຫ້ມະນຸດຮູ້ວ່າມີຫຍັງແດ່ທີ່ຕ້ອງສຳເລັດໃນແຕ່ລະຍຸກ, ມີຫຍັງແດ່ທີ່ພຣະເຈົ້າທີ່ບັງເກີດເປັນມະນຸດຕ້ອງເຮັດໃຫ້ສຳເລັດໃນລະຫວ່າງຍຸກສຸດທ້າຍ ແລະ ພັນທະກິດທີ່ພຣະອົງຕ້ອງໄດ້ປະຕິບັດ ແລະ ພຣະທຳທັງໝົດເຫຼົ່ານີ້ແມ່ນເພື່ອບັນລຸຄວາມໝາຍທີ່ແທ້ຈິງຂອງການທີ່ພຣະທຳປາກົດໃນເນື້ອໜັງ.

ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ແລ້ວວ່າ "ທຸກຄົນທີ່ໃສ່ໃຈກັບການຫຼຽວເບິ່ງໝາຍສຳຄັນ ແລະ ສິ່ງອັດສະຈັນກໍ່ຈະຖືກປະຖິ້ມ; ພວກເຂົາບໍ່ແມ່ນຄົນທີ່ຈະຖືກເຮັດໃຫ້ສົມບູນ". ເຮົາໄດ້ກ່າວພຣະທຳຫຼາຍຂໍ້ໄປແລ້ວ, ແຕ່ມະນຸດຍັງບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວກ່ຽວກັບພາລະກິດນີ້ ແລະ ເມື່ອມາເຖິງຈຸດນີ້ແລ້ວ ມະນຸດຍັງຮ້ອງຂໍໝາຍສຳຄັນ ແລະ ສິ່ງອັດສະຈັນຢູ່. ຄວາມເຊື່ອໃນພຣະເຈົ້າຂອງເຈົ້າເປັນພຽງການແຫວງຫາໝາຍສຳຄັນ ແລະ ສິ່ງອັດສະຈັນ ຫຼື ມັນແມ່ນເພື່ອຮັບເອົາຊີວິດ? ພຣະເຢຊູຍັງໄດ້ກ່າວພຣະທຳຫຼາຍຂໍ້ ແລະ ພຣະທຳບາງຂໍ້ຍັງບໍ່ທັນບັນລຸຜົນ. ເຈົ້າສາມາດເວົ້າໄດ້ບໍວ່າພຣະເຢຊູບໍ່ແມ່ນພຣະເຈົ້າ? ພຣະເຈົ້າເປັນພະຍານວ່າພຣະອົງຄືພຣະຄຣິດ ແລະ ພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ. ເຈົ້າສາມາດປະຕິເສດສິ່ງນີ້ໄດ້ບໍ? ໃນປັດຈຸບັນ, ພຣະເຈົ້າພຽງແຕ່ກ່າວພຣະທຳເທົ່ານັ້ນ ແລະ ຖ້າເຈົ້າບໍ່ສາມາດຮູ້ໄດ້ຢ່າງລະອຽດ, ແລ້ວເຈົ້າກໍ່ບໍ່ສາມາດຕັ້ງໝັ້ນໄດ້. ເຈົ້າເຊື່ອໃນພຣະອົງຍ້ອນວ່າພຣະອົງເປັນພຣະເຈົ້າ ຫຼື ເຈົ້າເຊື່ອໃນພຣະອົງໂດຍອີງຕາມຂໍ້ແທ້ຈິງທີ່ວ່າພຣະທຳຂອງພຣະອົງໄດ້ບັນລຸຜົນ ຫຼື ບໍ່? ເຈົ້າເຊື່ອໃນໝາຍສຳຄັນ ແລະ ສິ່ງອັດະຈັນບໍ ຫຼື ເຈົ້າເຊື່ອໃນພຣະເຈົ້າ? ມື້ນີ້, ພຣະອົງບໍ່ໄດ້ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ, ພຣະອົງເປັນພຣະເຈົ້າແທ້ໆບໍ? ຖ້າພຣະທຳທີ່ພຣະອົງກ່າວບໍ່ໄດ້ບັນລຸຜົນ, ພຣະອົງແມ່ນພຣະເຈົ້າແທ້ໆບໍ? ແກ່ນແທ້ຂອງພຣະເຈົ້າຖືກກຳນົດຈາກຂໍ້ແທ້ຈິງທີ່ວ່າພຣະທຳທີ່ພຣະອົງກ່າວໄດ້ສຳເລັດຜົນ ຫຼື ບໍ່ບໍ? ເປັນຫຍັງບາງຄົນຈຶ່ງລໍຖ້າໃຫ້ພຣະທຳຂອງພຣະເຈົ້າບັນລຸຜົນກ່ອນທີ່ພວກເຂົາຈະເຊື່ອໃນພຣະອົງ? ນີ້ບໍ່ໄດ້ໝາຍຄວາມວ່າພວກເຂົາບໍ່ຮູ້ຈັກພຣະອົງບໍ? ທຸກຄົນທີ່ມີແນວຄິດດັ່ງກ່າວແມ່ນຄົນທີ່ປະຕິເສດພຣະເຈົ້າ. ພວກເຂົາໃຊ້ແນວຄິດເພື່ອວັດແທກພຣະເຈົ້າ; ຖ້າພຣະທຳຂອງພຣະເຈົ້າບັນລຸຜົນ, ພວກເຂົາກໍ່ເຊື່ອໃນພຣະອົງ ແລະ ຖ້າພຣະທຳບໍ່ໄດ້ບັນລຸຜົນ ພວກເຂົາກໍ່ຈະບໍ່ເຊື່ອໃນພຣະອົງ; ແລະ ພວກເຂົາມັກສະແຫວງຫາໝາຍສຳຄັນ ແລະ ສິ່ງອັດສະຈັນ. ຄົນເຫຼົ່ານີ້ບໍ່ແມ່ນພວກຟາຣີຊາຍໃນຍຸກສະໄໝໃໝ່ບໍ? ການທີ່ເຈົ້າຈະສາມາດຕັ້ງໝັ້ນໄດ້ ຫຼື ບໍ່ນັ້ນແມ່ນຂຶ້ນກັບວ່າເຈົ້າຮູ້ຈັກພຣະເຈົ້າທີ່ແທ້ຈິງ ຫຼື ບໍ່, ນີ້ຄືສິ່ງທີ່ສຳຄັນ! ຍິ່ງຄວາມເປັນຈິງຂອງພຣະເຈົ້າໃນຕົວເຈົ້າມີຫຼາຍຂຶ້ນເທົ່າໃດ ຄວາມຮູ້ຂອງເຈົ້າກ່ຽວກັບຄວາມເປັນຈິງໃນພຣະເຈົ້າກໍ່ຍິ່ງຫຼາຍຂຶ້ນເທົ່ານັ້ນ ແລະ ເຈົ້າກໍ່ຍິ່ງສາມາດຕັ້ງໝັ້ນຢູ່ໃນລະຫວ່າງການທົດລອງໄດ້ຫຼາຍຂຶ້ນ. ຍິ່ງເຈົ້າໃສ່ໃຈໃນ

ການເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນຫຼາຍສ່ຳໃດ, ເຈົ້າກໍ່ຍິ່ງສາມາດຕັ້ງໝັ້ນໄດ້ໜ້ອຍລົງ ແລະ ເຈົ້າຈະຕົກຢູ່ທ່າມກາງການທົດລອງ. ໝາຍສຳຄັນ ແລະ ສິ່ງອັດສະຈັນບໍ່ແມ່ນຮາກຖານ; ມີພຽງແຕ່ຄວາມເປັນຈິງຂອງພຣະເຈົ້າເທົ່ານັ້ນທີ່ເປັນຊີວິດ. ບາງຄົນບໍ່ຮູ້ຜົນກະທົບທີ່ຈະຖືກບັນລຸໂດຍພາລະກິດຂອງພຣະເຈົ້າ. ພວກເຂົາໃຊ້ເວລາຂອງພວກເຂົາຢູ່ກັບຄວາມງົມງວາຍ, ບໍ່ສະແຫວງຫາຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ. ຈຸດປະສົງໃນການສະແຫວງຫາຂອງພວກເຂົາແມ່ນເພື່ອໃຫ້ພຣະເຈົ້າປະຕິບັດຕາມຄວາມປາຖະໜາຂອງພວກເຂົາ ແລະ ໃນເມື່ອນັ້ນເອງ ພວກເຂົາຈຶ່ງຈະຈິງຈັງໃນຄວາມເຊື່ອຂອງພວກເຂົາ. ພວກເຂົາເວົ້າວ່າ ພວກເຂົາຈະສະແຫວງຫາຊີວິດ ຖ້າພຣະທຳຂອງພຣະເຈົ້າບັນລຸຜົນ, ແຕ່ຖ້າພຣະທຳຂອງພຣະເຈົ້າບໍ່ໄດ້ບັນລຸຜົນ, ແລ້ວມັນກໍ່ບໍ່ມີຄວາມເປັນໄປໄດ້ທີ່ພວກເຂົາຈະສະແຫວງຫາຊີວິດ. ມະນຸດຄິດວ່າຄວາມເຊື່ອໃນພຣະເຈົ້າຄືການສະແຫວງຫາເພື່ອເບິ່ງໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ການສະແຫວງຫາເພື່ອຂຶ້ນສະຫວັນ ແລະ ສະຫວັນຊັ້ນທີສາມ. ບໍ່ມີໃຜທີ່ເວົ້າວ່າຄວາມເຊື່ອຂອງພວກເຂົາໃນພຣະເຈົ້າຄືການສະແຫວງຫາເພື່ອເຂົ້າສູ່ຄວາມເປັນຈິງ, ການສະແຫວງຫາຊີວິດ ແລະ ການສະແຫວງຫາເພື່ອຖືກຮັບເອົາໂດຍພຣະເຈົ້າ. ແມ່ນຫຍັງຄືຄຸນຄ່າໃນການສະແຫວງຫາແບບນີ້? ຜູ້ທີ່ບໍ່ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ຄວາມພໍໃຈຂອງພຣະເຈົ້າກໍ່ເປັນຄົນທີ່ບໍ່ເຊື່ອໃນພຣະເຈົ້າ; ພວກເຂົາເປັນຄົນທີ່ໝິ່ນປະໝາດພຣະເຈົ້າ!

ຕອນນີ້ ພວກເຈົ້າເຂົ້າໃຈບໍວ່າຄວາມເຊື່ອໃນພຣະເຈົ້າແມ່ນຫຍັງ? ຄວາມເຊື່ອໃນພຣະເຈົ້າໝາຍເຖິງການເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນບໍ? ມັນໝາຍເຖິງການຂຶ້ນສະຫວັນບໍ? ການເຊື່ອໃນພຣະເຈົ້າບໍ່ແມ່ນເລື່ອງງ່າຍແມ່ນແຕ່ໜ້ອຍດຽວ. ການປະຕິບັດທາງສາສະໜາເຫຼົ່ານັ້ນຄວນຖືກລົບລ້າງອອກ; ການສະແຫວງຫາການຮັກສາຄົນເຈັບປ່ວຍ, ການຂັບໄລ່ມານຮ້າຍ, ການໃສ່ໃຈກັບໝາຍສຳຄັນ ແລະ ສິ່ງອັດສະຈັນ, ການປາດຖະໜາເພື່ອຫວັງຮັບພຣະຄຸນຂອງພຣະເຈົ້າ, ຄວາມສະຫງົບສຸກ ແລະ ຄວາມສຸກໃຈຫຼາຍຂຶ້ນ, ການສະແຫວງຫາຄວາມຄາດຫວັງ ແລະ ຄວາມສຸກສະບາຍຂອງເນື້ອໜັງ, ສິ່ງເຫຼົ່ານີ້ແມ່ນການປະຕິບັດທາງສາສະໜາ ແລະ ການປະຕິບັດທາງສາສະໜາດັ່ງກ່າວຄືຄວາມເຊື່ອປະເພດທີ່ເລື່ອນລອຍ. ມື້ນີ້, ຄວາມເຊື່ອທີ່ແທ້ຈິງໃນພຣະເຈົ້າແມ່ນຫຍັງ? ມັນຄື ການຮັບເອົາພຣະທຳຂອງພຣະເຈົ້າໃຫ້ເປັນຄວາມຈິງໃນຊີວິດຂອງເຈົ້າ ແລະ ການຮູ້ຈັກພຣະເຈົ້າຈາກພຣະທຳຂອງພຣະອົງເພື່ອບັນລຸຄວາມຮັກທີ່ແທ້ຈິງຕໍ່ພຣະອົງ. ເພື່ອຈະເວົ້າຢ່າງຈະແຈ້ງກໍ່ຄື: ຄວາມເຊື່ອໃນພຣະເຈົ້າແມ່ນເພື່ອໃຫ້ເຈົ້າເຊື່ອຟັງພຣະເຈົ້າ, ຮັກພຣະເຈົ້າ ແລະ ປະຕິບັດໜ້າທີ່ທີ່ສິ່ງຖືກສ້າງຂອງພຣະເຈົ້າຄວນປະຕິບັດ. ນີ້ຄືຈຸດປະສົງຂອງການເຊື່ອໃນພຣະເຈົ້າ. ເຈົ້າຕ້ອງບັນລຸຄວາມຮູ້ກ່ຽວກັບຄວາມເປັນຕາຮັກຂອງພຣະເຈົ້າ, ພຣະເຈົ້າສົມຄວນແກ່ການເຄົາລົບນັບຖືສ່ຳໃດ ແລະ ໃນສິ່ງຖືກສ້າງຂອງພຣະອົງພຣະເຈົ້າປະຕິບັດພາລະກິດແຫ່ງການໄຖ່ບາບ ແລະ ເຮັດໃຫ້ພວກເຂົາສົມບູນແນວໃດ, ສິ່ງເຫຼົ່ານີ້ຄືພື້ນຖານທີ່ແທ້ຈິງໃນຄວາມເຊື່ອຂອງເຈົ້າໃນພຣະເຈົ້າ. ຄວາມເຊື່ອໃນພຣະເຈົ້າຄືການປ່ຽນຈາກຊີວິດຂອງເນື້ອໜັງໄປສູ່ຊີວິດແຫ່ງການຮັກພຣະເຈົ້າເປັນຫຼັກ; ຈາກການດຳລົງຊີວິດພາຍໃນຄວາມເສື່ອມຊາມໄປສູ່ການດຳລົງຊີວິດພາຍໃນຊີວິດແຫ່ງພຣະທຳພຣະເຈົ້າ; ມັນຄືການອອກຈາກການຢູ່ພາຍໃຕ້ອຳນາດ

ຂອງຊາຕານ ແລະ ການດຳລົງຊີວິດພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະເຈົ້າ; ມັນຄືການທີ່ສາມາດບັນລຸຄວາມເຊື່ອຟັງຕໍ່ພຣະເຈົ້າ ແລະ ບໍ່ແມ່ນຄວາມເຊື່ອຟັງຕໍ່ເນື້ອໜັງ; ມັນຄືການປ່ອຍໃຫ້ໃຫ້ພຣະເຈົ້າຮັບເອົາຫົວໃຈທັງໝົດຂອງເຈົ້າ, ອະນຸຍາດໃຫ້ພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບ ແລະ ປົດປ່ອຍຕົວເຈົ້າເອງອອກຈາກອຸປະນິໄສທີ່ເສື່ອມຊາມແບບຊາຕານ. ຄວາມເຊື່ອໃນພຣະເຈົ້າແມ່ນເພື່ອໃຫ້ລິດອຳນາດ ແລະ ສະຫງ່າລາສີຂອງພຣະເຈົ້າຈະໄດ້ສຳແດງອອກໃນຕົວເຈົ້າເປັນຫຼັກ, ເພື່ອວ່າເຈົ້າອາດເຮັດຕາມຄວາມປະສົງຂອງພຣະເຈົ້າ ແລະ ສຳເລັດແຜນການຂອງພຣະເຈົ້າ ແລະ ສາມາດເປັນພະຍານໃຫ້ແກ່ພຣະອົງຕໍ່ໜ້າຊາຕານ. ຄວາມເຊື່ອໃນພຣະເຈົ້າບໍ່ຄວນກ່ຽວກັບຄວາມປາຖະໜາທີ່ຈະເບິ່ງເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ ຫຼື ມັນບໍ່ຄວນເຫັນແກ່ເນື້ອໜັງສ່ວນຕົວຂອງເຈົ້າ. ມັນຄວນກ່ຽວກັບການສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ການທີ່ສາມາດເຊື່ອຟັງພຣະເຈົ້າ ແລະ ການເຊື່ອຟັງພຣະອົງຈົນເຖິງຕາຍເຊັ່ນດຽວກັບເປໂຕ. ສິ່ງເຫຼົ່ານີ້ຄືຈຸດປະສົງຫຼັກຂອງການເຊື່ອໃນພຣະເຈົ້າ. ຄົນໜຶ່ງກິນ ແລະ ດື່ມພຣະທຳຂອງພຣະເຈົ້າເພື່ອຮູ້ຈັກພຣະເຈົ້າ ແລະ ເຮັດໃຫ້ພຣະອົງພໍໃຈ. ການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າເຮັດໃຫ້ເຈົ້າມີຄວາມຮູ້ຫຼາຍຂຶ້ນກ່ຽວກັບພຣະເຈົ້າ, ພຽງແຕ່ຫຼັງຈາກນັ້ນ ເຈົ້າຈຶ່ງສາມາດເຊື່ອຟັງພຣະເຈົ້າໄດ້. ດ້ວຍຄວາມຮູ້ກ່ຽວກັບພຣະເຈົ້າເທົ່ານັ້ນ, ເຈົ້າຈຶ່ງສາມາດຮັກພຣະອົງໄດ້ ແລະ ນີ້ຄືເປົ້າໝາຍທີ່ມະນຸດຄວນມີໃນຄວາມເຊື່ອຂອງເຂົາຕໍ່ພຣະເຈົ້າ. ໃນຄວາມເຊື່ອຂອງເຈົ້າໃນພຣະເຈົ້າ, ຖ້າເຈົ້າພະຍາຍາມເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນຢູ່ສະເໝີ, ແລ້ວມຸມມອງຄວາມເຊື່ອໃນພຣະເຈົ້າແບບນີ້ກໍ່ບໍ່ຖືກຕ້ອງ. ຄວາມເຊື່ອໃນພຣະເຈົ້າຄືການຍອມຮັບພຣະທຳຂອງພຣະເຈົ້າໃຫ້ເປັນຄວາມຈິງແຫ່ງຊີວິດເປັນຫຼັກ. ຈຸດປະສົງຂອງພຣະເຈົ້າແມ່ນພຽງແຕ່ຖືກບັນລຸໂດຍການນຳພຣະທຳຂອງພຣະເຈົ້າຈາກປາກຂອງພຣະເຈົ້າໄປປະຕິບັດ ແລະ ການປະຕິບັດພວກມັນພາຍໃນຕົວເຈົ້າເອງ. ໃນຄວາມເຊື່ອໃນພຣະເຈົ້າ, ມະນຸດຄວນດີ້ນຮົນເພື່ອຖືກພຣະເຈົ້າເຮັດໃຫ້ສົມບູນ, ສາມາດອ່ອນນ້ອມຕໍ່ພຣະເຈົ້າ ແລະ ເຊື່ອຟັງພຣະເຈົ້າຢ່າງສົມບູນ. ຖ້າເຈົ້າສາມາດເຊື່ອຟັງພຣະເຈົ້າໂດຍບໍ່ມີການຈົ່ມຕໍ່ວ່າໃດໆ, ໃສ່ໃຈຕໍ່ຄວາມປາຖະໜາຂອງພຣະເຈົ້າ, ບັນລຸວຸດທິພາວະຂອງເປໂຕ ແລະ ມີແນວທາງແບບເປໂຕທີ່ພຣະເຈົ້າໄດ້ກ່າວເຖິງ, ແລ້ວນັ້ນກໍ່ຈະເປັນເວລາທີ່ເຈົ້າໄດ້ບັນລຸຄວາມສຳເລັດໃນຄວາມເຊື່ອໃນພຣະເຈົ້າ ແລະ ມັນຈະເປັນການສະແດງໃຫ້ເຫັນວ່າເຈົ້າຖືກຮັບເອົາໂດຍພຣະເຈົ້າແລ້ວ.

ພຣະເຈົ້າເຮັດພາລະກິດຂອງພຣະອົງທົ່ວຈັກກະວານທັງປວງ. ທຸກຄົນທີ່ເຊື່ອໃນພຣະອົງກໍ່ຕ້ອງຍອມຮັບພຣະທຳຂອງພຣະອົງ ແລະ ກິນ ແລະ ດື່ມພຣະທຳຂອງພຣະອົງ; ບໍ່ມີໃຜສາມາດຖືກຮັບເອົາໂດຍພຣະເຈົ້າໂດຍການເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນທີ່ພຣະອົງໄດ້ສະແດງອອກ. ຕະຫຼອດຍຸກຕ່າງໆ, ພຣະເຈົ້າໄດ້ໃຊ້ພຣະທຳເພື່ອເຮັດໃຫ້ມະນຸດສົມບູນຢູ່ສະເໝີ. ດັ່ງນັ້ນ ພວກເຈົ້າບໍ່ຄວນອຸທິດຄວາມສົນໃຈທັງໝົດຂອງເຈົ້າໃສ່ໝາຍສຳຄັນ ແລະ ສິ່ງອັດສະຈັນ, ແຕ່ຄວນດີ້ນຮົນເພື່ອຖືກພຣະເຈົ້າເຮັດໃຫ້ສົມບູນ. ໃນພັນທະສັນຍາເດີມໃນຍຸກແຫ່ງພຣະບັນຍັດ, ພຣະເຈົ້າໄດ້ກ່າວພຣະທຳບາງຂໍ້ ແລະ ໃນຍຸກແຫ່ງພຣະຄຸນ ພຣະເຢຊູກໍ່ໄດ້ກ່າວພຣະທຳຫຼາຍຂໍ້ເຊັ່ນກັນ. ຫຼັງຈາກທີ່ພຣະເຢຊູໄດ້ກ່າວຂໍ້

ພຣະທຳຫຼາຍຂໍ້, ພວກອັກຄະສາວົກ ແລະ ສາວົກພາຍຫຼັງກໍ່ໄດ້ນຳພາຜູ້ຄົນໃຫ້ປະຕິບັດຕາມພຣະບັນຍັດຕ່າງໆທີ່ພຣະເຢຊູໄດ້ກຳນົດອອກ ແລະ ເຮັດໃຫ້ພວກເຂົາມີປະສົບການຕາມພຣະທຳ ແລະ ຫຼັກການທີ່ພຣະເຢຊູໄດ້ກ່າວໄວ້. ໃນຍຸກສຸດທ້າຍ, ພຣະເຈົ້າໃຊ້ພຣະທຳເພື່ອເຮັດໃຫ້ມະນຸດສົມບູນແບບເປັນຫຼັກ. ພຣະອົງບໍ່ໄດ້ໃຊ້ໝາຍສຳຄັນ ແລະ ສິ່ງອັດສະຈັນເພື່ອກົດຂີ່ມະນຸດ ຫຼື ຊັກຈູງມະນຸດ; ສິ່ງນີ້ບໍ່ສາມາດເຮັດໃຫ້ລິດອຳນາດຂອງພຣະເຈົ້າຊັດແຈ້ງຂຶ້ນໄດ້. ຖ້າພຣະເຈົ້າພຽງແຕ່ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນເທົ່ານັ້ນ, ແລ້ວມັນກໍ່ເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ຄວາມເປັນຈິງຂອງພຣະເຈົ້າຊັດເຈນ ແລະ ດ້ວຍເຫດນັ້ນ ມັນກໍ່ເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ມະນຸດສົມບູນແບບ. ພຣະເຈົ້າບໍ່ໄດ້ເຮັດໃຫ້ມະນຸດສົມບູນແບບໂດຍໝາຍສຳຄັນ ແລະ ສິ່ງອັດສະຈັນ, ແຕ່ໃຊ້ພຣະທຳເພື່ອຫົດນໍ້າ ແລະ ລ້ຽງດູມະນຸດເຊິ່ງ ຫຼັງຈາກນັ້ນ ມະນຸດກໍ່ຈະໄດ້ບັນລຸຄວາມເຊື່ອຟັງຢ່າງສົມບູນ ແລະ ມະນຸດກໍ່ຈະມີຄວາມຮູ້ກ່ຽວກັບພຣະເຈົ້າ. ນີ້ຄືເປົ້າໝາຍໃນພາລະກິດທີ່ພຣະອົງປະຕິບັດ ແລະ ພຣະທຳທີ່ພຣະອົງກ່າວ. ພຣະເຈົ້າບໍ່ໄດ້ໃຊ້ວິທີການສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນເພື່ອເຮັດໃຫ້ມະນຸດສົມບູນ, ພຣະອົງໃຊ້ພຣະທຳ ແລະ ໃຊ້ວິທີການປະຕິບັດພາລະກິດທີ່ແຕກຕ່າງກັນເພື່ອເຮັດໃຫ້ມະນຸດສົມບູນ. ບໍ່ວ່າມັນຈະເປັນຫຼໍ່ຫຼອມ, ການຈັດການ, ການລິຮານ ຫຼື ການສະໜອງຈາກພຣະທຳ, ພຣະເຈົ້າກ່າວຈາກຫຼາຍມຸມມອງທີ່ແຕກຕ່າງກັນເພື່ອເຮັດໃຫ້ມະນຸດສົມບູນແບບ ແລະ ເພື່ອໃຫ້ມະນຸດມີຄວາມຮູ້ຫຼາຍຂຶ້ນກ່ຽວກັບພາລະກິດຂອງພຣະເຈົ້າ, ກ່ຽວກັບສະຕິປັນຍາ ແລະ ຄວາມອັດສະຈັນຂອງພຣະເຈົ້າ. ເມື່ອມະນຸດຖືກເຮັດໃຫ້ສົມບູນໃນເວລາທີ່ພຣະເຈົ້າສິ້ນສຸດຍຸກດັ່ງກ່າວຍຸກສຸດທ້າຍ, ແລ້ວເຂົາກໍ່ຈະມີຄຸນສົມບັດທີ່ຈະເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ. ເມື່ອເຈົ້າມາຮູ້ຈັກພຣະເຈົ້າ ແລະ ສາມາດເຊື່ອຟັງພຣະເຈົ້າບໍ່ວ່າພຣະອົງຈະເຮັດສິ່ງໃດກໍ່ຕາມ, ເຈົ້າກໍ່ຈະບໍ່ມີຄວາມຄິດໃດກ່ຽວກັບພຣະເຈົ້າອີກຕໍ່ໄປ ເມື່ອເຈົ້າເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ. ໃນຊ່ວງເວລານີ້, ເຈົ້າເສື່ອມຊາມ ແລະ ບໍ່ສາມາດເຊື່ອຟັງພຣະເຈົ້າໄດ້ຢ່າງສົມບູນ, ເຈົ້າຄິດວ່າເຈົ້າມີຄຸນສົມບັດທີ່ຈະເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນໃນສະພາວະນີ້ບໍ? ເມື່ອພຣະເຈົ້າສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ, ນັ້ນແມ່ນເວລາທີ່ພຣະເຈົ້າລົງໂທດມະນຸດ ແລະ ຍັງເປັນເວລາທີ່ຍຸກດັ່ງກ່າວປ່ຽນໄປ ແລະ ຍິ່ງໄປກວ່ານັ້ນ ມັນເປັນເວລາທີ່ຍຸກດັ່ງກ່າວສິ້ນສຸດລົງ. ເມື່ອພາລະກິດຂອງພຣະເຈົ້າຖືກດຳເນີນການຢ່າງເປັນປົກກະຕິ, ພຣະອົງບໍ່ໄດ້ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນໃດໆ. ການສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນນັ້ນເປັນສິ່ງທີ່ງ່າຍຫຼາຍຈົນເປັນຕາຫົວສຳລັບພຣະອົງ, ແຕ່ນັ້ນບໍ່ແມ່ນຫຼັກການໃນພາລະກິດຂອງພຣະເຈົ້າ ຫຼື ມັນບໍ່ແມ່ນເປົ້າໝາຍຂອງການຄຸ້ມຄອງມະນຸດຂອງພຣະເຈົ້າ. ຖ້າມະນຸດໄດ້ເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ ແລະ ຖ້າຮ່າງກາຍຝ່າຍວິນຍານຂອງພຣະເຈົ້າປາກົດຕົວຕໍ່ມະນຸດ, ທຸກຄົນຈະບໍ່ເຊື່ອໃນພຣະເຈົ້າບໍ? ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ແລ້ວວ່າ ກຸ່ມຂອງຜູ້ຊະນະແມ່ນຖືກຮັບເອົາຈາກທິດຕາເວັນອອກ, ຜູ້ຊະນະທີ່ມາຈາກຄວາມຍາກລຳບາກທີ່ຍິ່ງໃຫຍ່. ຄວາມໝາຍຂອງພຣະທຳເຫຼົ່ານັ້ນແມ່ນຫຍັງ? ພວກມັນໝາຍຄວາມວ່າຜູ້ຄົນເຫຼົ່ານີ້ທີ່ຖືກຮັບເອົາພຽງແຕ່ເຊື່ອຟັງຢ່າງແທ້ຈິງຫຼັງຈາກທີ່ໄດ້ຜ່ານການພິພາກສາ, ການຕີສອນ, ການຈັດການ, ການລິຮານ ແລະ ການຫຼໍ່ຫຼອມທຸກຮູບແບບ. ຄວາມເຊື່ອຂອງຄົນເຫຼົ່ານີ້ບໍ່ໄດ້ເລື່ອນ

ລອຍ ຫຼື ເປັນນາມມະທຳ, ແຕ່ມັນຄືຄວາມເຊື່ອທີ່ແທ້ຈິງ. ພວກເຂົາບໍ່ໄດ້ເຫັນໝາຍສຳຄັນ ແລະ ສິ່ງອັດສະຈັນ ຫຼື ປະຕິຫານໃດໆ; ພວກເຂົາບໍ່ເວົ້າເຖິງຕົວໜັງສື ແລະ ທິດສະດີທີ່ບໍ່ຈະແຈ້ງ ຫຼື ຄວາມເຂົ້າໃຈຢ່າງເລິກເຊິ່ງ; ກົງກັນຂ້າມ ພວກເຂົາມີຄວາມຈິງ ແລະ ພຣະທຳຂອງພຣະເຈົ້າ ແລະ ມີຄວາມຮູ້ທີ່ແທ້ຈິງກ່ຽວກັບຄວາມເປັນຈິງຂອງພຣະເຈົ້າ. ຄົນກຸ່ມດັ່ງກ່າວຈະບໍ່ສາມາດເຮັດໃຫ້ລິດອຳນາດຂອງພຣະເຈົ້າຊັດເຈນຂຶ້ນບໍ? ພາລະກິດຂອງພຣະເຈົ້າໃນລະຫວ່າງຍຸກສຸດທ້າຍຄືພາລະກິດທີ່ແທ້ຈິງ. ໃນລະຫວ່າງຍຸກຂອງພຣະເຢຊູ, ພຣະອົງບໍ່ໄດ້ມາເພື່ອເຮັດໃຫ້ມະນຸດສົມບູນແບບ, ແຕ່ເພື່ອໄຖ່ບາບມະນຸດ ແລະ ດ້ວຍເຫດນັ້ນ ພຣະອົງໄດ້ສະແດງປະຕິຫານບາງຢ່າງເພື່ອເຮັດໃຫ້ຜູ້ຄົນຕິດຕາມພຣະອົງ. ຍ້ອນພຣະອົງໄດ້ມາເພື່ອສຳເລັດພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນເປັນຫຼັກ ແລະ ການສະແດງໝາຍສຳຄັນບໍ່ແມ່ນສ່ວນໜຶ່ງຂອງພາລະກິດໃນພັນທະກິດຂອງພຣະອົງ. ໝາຍສຳຄັນ ແລະ ສິ່ງອັດສະຈັນດັ່ງກ່າວຄືພາລະກິດທີ່ຖືກປະຕິບັດເພື່ອເຮັດໃຫ້ພາລະກິດຂອງພຣະອົງມີປະສິດທິພາບ; ມັນຄືພາລະກິດພິເສດ ແລະ ບໍ່ໄດ້ສະແດງເຖິງພາລະກິດຂອງຍຸກທັງໝົດ. ໃນລະຫວ່າງຍຸກແຫ່ງພຣະບັນຍັດໃນພັນທະສັນຍາເດີມ, ພຣະເຈົ້າຍັງໄດ້ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນບາງຢ່າງ, ແຕ່ພາລະກິດທີ່ພຣະເຈົ້າປະຕິບັດໃນມື້ນີ້ຄືພາລະກິດແທ້ຈິງ ແລະ ພຣະອົງຈະບໍ່ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນໃດໆໃນຕອນນີ້ຢ່າງແນ່ນອນ. ຖ້າພຣະອົງສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ, ພາລະກິດທີ່ແທ້ຈິງຂອງພຣະອົງກໍ່ຈະເກີດຄວາມວຸ້ນວາຍ ແລະ ພຣະອົງກໍ່ຈະບໍ່ສາມາດປະຕິບັດພາລະກິດໃດໆອີກຕໍ່ໄປ. ຖ້າພຣະເຈົ້າເວົ້າທີ່ຈະໃຊ້ພຣະທຳເພື່ອເຮັດໃຫ້ມະນຸດສົມບູນແບບ, ແຕ່ຍັງສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ, ແລ້ວມັນຈະຖືກເຮັດໃຫ້ຊັດເຈນໄດ້ບໍວ່າ ມະນຸດເຊື່ອໃນພຣະອົງ ຫຼື ບໍ່? ດັ່ງນັ້ນ, ພຣະເຈົ້າບໍ່ໄດ້ເຮັດສິ່ງດັ່ງກ່າວ. ມີສາສະໜາຫຼາຍເກີນໄປພາຍໃນມະນຸດ; ພຣະເຈົ້າໄດ້ມາໃນລະຫວ່າງຍຸກສຸດທ້າຍເພື່ອກຳຈັດແນວຄວາມຄິດທາງສາສະໜາ ແລະ ສິ່ງເໜືອທຳມະຊາດທັງໝົດພາຍໃນມະນຸດ ແລະ ເຮັດໃຫ້ມະນຸດຮູ້ຈັກຄວາມຈິງຂອງພຣະເຈົ້າ. ພຣະອົງໄດ້ມາເພື່ອກຳຈັດຮູບພາບຂອງພຣະເຈົ້າທີ່ເປັນນາມມະທຳ ແລະ ເປັນພຽງຈິນຕະນາການ ເຊິ່ງເວົ້າໄດ້ອີກຢ່າງໜຶ່ງກໍ່ຄື ເປັນຮູບພາບຂອງພຣະເຈົ້າທີ່ບໍ່ມີຕົວຕົນເລີຍ. ດັ່ງນັ້ນ, ຕອນນີ້ ສິ່ງດຽວທີ່ມີຄຸນຄ່າກໍ່ຄືໃຫ້ເຈົ້າມີຄວາມຮູ້ກ່ຽວກັບຄວາມຈິງ! ຄວາມຈິງຈະລົບລ້າງທຸກສິ່ງ. ມື້ນີ້ ເຈົ້າມີຄວາມຈິງຫຼາຍປານໃດ? ທຸກສິ່ງທີ່ສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນແມ່ນພຣະເຈົ້າບໍ? ວິນຍານຊົ່ວຮ້າຍຍັງສາມາດສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນເຊັ່ນກັນ; ພວກມັນທັງໝົດແມ່ນພຣະເຈົ້າບໍ? ໃນຄວາມເຊື່ອຂອງເຂົາໃນພຣະເຈົ້າ, ສິ່ງທີ່ມະນຸດຄົ້ນຫາຄືຄວາມຈິງ ແລະ ສິ່ງທີ່ເຂົາສະແຫວງຫາຄືຊີວິດ, ແທນທີ່ຈະເປັນໝາຍສຳຄັນ ແລະ ສິ່ງອັດສະຈັນ. ສິ່ງນີ້ຄວນເປັນເປົ້າໝາຍຂອງທຸກຄົນທີ່ເຊື່ອໃນພຣະເຈົ້າ.

# ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ ແມ່ນຄົນທີ່ສາມາດຍອມອ່ອນນ້ອມຕໍ່ ຄວາມເປັນຈິງຂອງພຣະອົງຢ່າງສິ້ນເຊີງ

ການໄດ້ຮັບຄວາມຮູ້ກ່ຽວກັບຄວາມເປັນຈິງ ແລະ ການເຂົ້າໃຈພາລະກິດຂອງພຣະເຈົ້າຢ່າງຖີ່ຖ້ວນ, ທັງສອງສິ່ງນີ້ແມ່ນເຫັນໄດ້ໃນພຣະທຳຂອງພຣະອົງ ແລະ ໂດຍຜ່ານຖ້ອຍຄຳເຫຼົ່ານີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດຮັບເອົາແສງສະຫວ່າງໄດ້. ສະນັ້ນ ເຈົ້າຄວນເຮັດຫຼາຍກວ່າເກົ່າເພື່ອປະກອບຕົນເອງດ້ວຍພຣະທຳຂອງພຣະເຈົ້າ. ໃຫ້ສື່ສານຄວາມເຂົ້າໃຈຂອງເຈົ້າກ່ຽວກັບພຣະທຳຂອງພຣະເຈົ້າໃນການໂອ້ລົມ ແລະ ໃນລັກສະນະນີ້ ເຈົ້າຈະສາມາດສ່ອງແສງສະຫວ່າງໃຫ້ຄົນອື່ນ ແລະ ມອບທາງອອກໃຫ້ພວກເຂົາ, ນີ້ແມ່ນເສັ້ນທາງທີ່ເປັນຈິງ. ກ່ອນທີ່ພຣະເຈົ້າຈະຈັດແຈງສະພາບແວດລ້ອມໃຫ້ແກ່ເຈົ້າ, ພວກເຈົ້າຕ້ອງປະກອບຕົນເອງດ້ວຍພຣະທຳຂອງພຣະອົງກ່ອນ. ນີ້ແມ່ນສິ່ງທີ່ທຸກຄົນຄວນເຮັດ; ມັນຄືບູລິມະສິດທີ່ຮີບດ່ວນ. ກ່ອນອື່ນແມ່ນໃຫ້ໄປເຖິງຈຸດທີ່ເຈົ້າຮູ້ຈັກວິທີການກິນ ແລະ ດື່ມພຣະທຳຂອງພຣະອົງ. ສຳລັບສິ່ງໃດໜຶ່ງທີ່ເຈົ້າບໍ່ສາມາດເຮັດໄດ້ນັ້ນ, ໃຫ້ຄົ້ນຫາເສັ້ນທາງແຫ່ງການປະຕິບັດໃນພຣະທຳຂອງພຣະອົງ ແລະ ຊອກຫາໃນຖ້ອຍຄຳເຫຼົ່ານີ້ກ່ຽວກັບບັນຫາໃດໜຶ່ງທີ່ເຈົ້າບໍ່ເຂົ້າໃຈ ຫຼື ຄວາມຫຍຸ້ງຍາກໃດໜຶ່ງທີ່ເຈົ້າອາດມີ. ເຮັດໃຫ້ພຣະທຳຂອງພຣະເຈົ້າເປັນການບຳລຸງລ້ຽງຂອງເຈົ້າ ແລະ ຍອມໃຫ້ພຣະທຳເຫຼົ່ານັ້ນຊ່ວຍເຈົ້າແກ້ໄຂຄວາມຫຍຸ້ງຍາກ ແລະ ບັນຫາຕົວຈິງຂອງເຈົ້າ; ນອກຈາກນັ້ນກໍຍອມໃຫ້ພຣະທຳຂອງພຣະອົງກາຍມາເປັນການຊ່ວຍເຫຼືອໃນຊີວິດຂອງເຈົ້າ. ສິ່ງເຫຼົ່ານີ້ຈະຮຽກຮ້ອງໃຫ້ເຈົ້າພະຍາຍາມໃນສ່ວນຂອງເຈົ້າ. ໃນການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງບັນລຸຜົນ; ເຈົ້າຕ້ອງສາມາດສະຫງົບຫົວໃຈຂອງເຈົ້າຢູ່ຕໍ່ໜ້າພຣະອົງ ແລະ ເຈົ້າຕ້ອງປະຕິບັດຕາມຖ້ອຍຄຳຂອງພຣະອົງເມື່ອໃດກໍຕາມທີ່ເຈົ້າພົບກັບບັນຫາໃດໜຶ່ງ. ເມື່ອເຈົ້າບໍ່ໄດ້ພົບກັບບັນຫາໃດໜຶ່ງ, ເຈົ້າຄວນພຽງແຕ່ກັງວົນກັບການກິນ ແລະ ການດື່ມພຣະທຳຂອງພຣະອົງເທົ່ານັ້ນ. ບາງເທື່ອ ເຈົ້າອາດອະທິຖານ ແລະ ຕຶກຕອງຄວາມຮັກຂອງພຣະເຈົ້າ, ແບ່ງປັນຄວາມເຂົ້າໃຈຂອງເຈົ້າກ່ຽວກັບພຣະທຳຂອງພຣະອົງໃນການໂອ້ລົມ ແລະ ສື່ສານກ່ຽວກັບແສງສະຫວ່າງ ແລະ ແສງເຍືອງທາງທີ່ເຈົ້າປະສົບຢູ່ພາຍໃນຕົວເຈົ້າເອງ ແລະ ປະຕິກິລິຍາທີ່ເຈົ້າມີໃນຂະນະທີ່ກຳລັງອ່ານຖ້ອຍຄຳເຫຼົ່ານີ້. ຍິ່ງໄປກວ່ານັ້ນ, ເຈົ້າສາມາດມອບທາງອອກໃຫ້ແກ່ຜູ້ຄົນ. ມີພຽງແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນຈິງ. ເປົ້າໝາຍຂອງການເຮັດແບບນີ້ແມ່ນເພື່ອຍອມໃຫ້ພຣະທຳຂອງພຣະເຈົ້າກາຍມາເປັນການບຳລຸງລ້ຽງຕົວຈິງຂອງເຈົ້າ.

ຕະຫຼອດໜຶ່ງມື້, ເຈົ້າໃຊ້ເວລາຈັກຊົ່ວໂມງຢູ່ຕໍ່ໜ້າພຣະເຈົ້າແທ້ໆ? ເຈົ້າໄດ້ມອບເວລາໃນມື້ຂອງເຈົ້າໃຫ້ກັບພຣະເຈົ້າຫຼາຍສໍ່າໃດ? ມອບໃຫ້ເນື້ອໜັງຫຼາຍສໍ່າໃດ? ການເຮັດໃຫ້ຫົວໃຈຂອງຄົນໆໜຶ່ງແນໄປຫາພຣະເຈົ້າຢູ່ສະເໝີແມ່ນບາດກ້າວທຳອິດຂອງການຢູ່ໃນເສັ້ນທາງທີ່ຖືກຕ້ອງເພື່ອທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ຖ້າເຈົ້າສາມາດອຸທິດຫົວໃຈຂອງເຈົ້າ, ຮ່າງກາຍ ແລະ ຄວາມຮັກທີ່ແທ້ຈິງທັງໝົດຂອງເຈົ້າໃຫ້ກັບພຣະເຈົ້າ, ຈັດວາງພວກມັນຕໍ່ໜ້າພຣະເຈົ້າ, ເຊື່ອຟັງພຣະອົງຢ່າງສົມບູນ ແລະ

ຄຳນຶງເຖິງຄວາມປະສົງຂອງພຣະອົງຫຼາຍທີ່ສຸດ, ບໍ່ແມ່ນເພື່ອເນື້ອໜັງ, ບໍ່ແມ່ນເພື່ອຄອບຄົວ ແລະ ບໍ່ແມ່ນເພື່ອຄວາມປາຖະໜາສ່ວນຕົວຂອງເຈົ້າເອງ, ແຕ່ເພື່ອຜົນປະໂຫຍດຂອງຄົວເຮືອນຂອງພຣະເຈົ້າ, ນຳເອົາພຣະທຳຂອງພຣະເຈົ້າເປັນຫຼັກການ ແລະ ເປັນພື້ນຖານໃນທຸກສິ່ງ, ແລ້ວໂດຍການເຮັດແບບນີ້, ເຈດຕະນາຂອງເຈົ້າ ແລະ ທັດສະນະຂອງເຈົ້າກໍຈະຢູ່ຖືກບ່ອນທັງໝົດ ແລະ ຫຼັງຈາກນັ້ນ ເຈົ້າກໍຈະເປັນຄົນຢູ່ຕໍ່ໜ້າພຣະເຈົ້າທີ່ໄດ້ຮັບການສັນລະເສີນຂອງພຣະອົງ. ຄົນທີ່ພຣະເຈົ້າມັກແມ່ນຄົນທີ່ເດັດຂາດຕໍ່ພຣະອົງ; ພວກເຂົາເປັນຄົນທີ່ສາມາດອຸທິດຕໍ່ພຣະອົງພຽງຜູ້ດຽວ. ຄົນທີ່ພຣະເຈົ້າກຽດຊັງແມ່ນຄົນທີ່ສອງຈິດສອງໃຈຕໍ່ພຣະອົງ ແລະ ຄົນທີ່ກະບົດຕໍ່ພຣະອົງ. ພຣະອົງກຽດຊັງຄົນທີ່ເຊື່ອໃນພຣະອົງ ແລະ ຕ້ອງການມີຄວາມສຸກກັບພຣະອົງຢູ່ສະເໝີ ໃນຂະນະທີ່ບໍ່ສາມາດເສຍສະຫຼະຕົນເອງເພື່ອພຣະອົງຢ່າງສົມບູນ. ພຣະອົງກຽດຊັງຄົນທີ່ເວົ້າວ່າພວກເຂົາຮັກພຣະອົງ ແຕ່ກະບົດຕໍ່ພຣະອົງໃນຫົວໃຈຂອງພວກເຂົາ; ພຣະອົງກຽດຊັງຄົນທີ່ໃຊ້ຄຳເວົ້າທີ່ຄ່ອງແຄ່ວ ແລະ ສວຍຫຼູເພື່ອຫຼອກລວງ. ຄົນທີ່ບໍ່ໄດ້ອຸທິດຕົນຢ່າງແທ້ຈິງຕໍ່ພຣະເຈົ້າ ຫຼື ຄົນທີ່ບໍ່ໄດ້ຍອມອ່ອນນ້ອມຕໍ່ພຣະອົງຢ່າງແທ້ຈິງແມ່ນຄົນທີ່ທໍລະຍົດ ແລະ ອວດດີເກີນໄປໂດຍທຳມະຊາດ. ຄົນທີ່ບໍ່ສາມາດຍອມອ່ອນນ້ອມຕໍ່ໜ້າພຣະເຈົ້າທີ່ປົກກະຕິ ແລະ ເປັນຈິງແທ້ໆກໍຍິ່ງເປັນຄົນທີ່ອວດດີ ແລະ ໂດຍສະເພາະແລ້ວ ພວກເຂົາເປັນລູກຫຼານທີ່ເຮັດໜ້າທີ່ຕໍ່າຈາກອັກຄະເທວະດາ. ຜູ້ຄົນທີ່ເສຍສະຫຼະຕົນເອງສຳລັບພຣະເຈົ້າຢ່າງແທ້ຈິງກໍອຸທິດການເປັນຢູ່ທັງໝົດຂອງພວກເຂົາຕໍ່ພຣະອົງ ແລະ ວາງພວກມັນຢູ່ຕໍ່ໜ້າພຣະອົງ; ພວກເຂົາສາມາດຍອມອ່ອນນ້ອມຕໍ່ພຣະທຳ ແລະ ພາລະກິດທັງໝົດຂອງພຣະອົງ ແລະ ສາມາດນຳພຣະທຳຂອງພຣະອົງເຂົ້າສູ່ການປະຕິບັດ. ພວກເຂົາສາມາດຮັບພຣະທຳຂອງພຣະເຈົ້າເປັນພື້ນຖານຂອງການເປັນຢູ່ຂອງພວກເຂົາ ແລະ ພວກເຂົາສາມາດຄົ້ນຫາຢ່າງຈິງໃຈພາຍໃນພຣະທຳຂອງພຣະເຈົ້າເພື່ອຊອກຫາສ່ວນຕ່າງໆທີ່ຈະປະຕິບັດ. ນີ້ແມ່ນຄົນທີ່ດຳລົງຊີວິດຢູ່ຕໍ່ໜ້າພຣະເຈົ້າຢ່າງແທ້ຈິງ. ຖ້າເຈົ້າປະຕິບັດໃນລັກສະນະນີ້, ມັນກໍຈະເປັນປະໂຫຍດສຳລັບຊີວິດຂອງເຈົ້າ ແລະ ຜ່ານການກິນ ແລະ ການດື່ມພຣະທຳຂອງພຣະອົງ, ເຈົ້າກໍຈະສາມາດບັນລຸຄວາມຕ້ອງການພາຍໃນ ແລະ ຄວາມບໍ່ພຽງພໍຂອງເຈົ້າ ເພື່ອວ່າຊີວິດ-ອຸປະນິໄສຂອງເຈົ້າຈະໄດ້ຮັບການປ່ຽນແປງ, ແລ້ວນີ້ກໍຈະເປັນການປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ຖ້າເຈົ້າປະພຶດຕາມສິ່ງທີ່ພຣະເຈົ້າຮຽກຮ້ອງ ແລະ ຖ້າເຈົ້າບໍ່ເຮັດໃຫ້ເນື້ອໜັງພໍໃຈ ແຕ່ປະຕິບັດຕາມຄວາມປະສົງຂອງພຣະອົງແທນ, ແລ້ວໃນນີ້ ເຈົ້າກໍຈະເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ. ການເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າໝາຍຄວາມວ່າເຈົ້າສາມາດປະຕິບັດໜ້າທີ່ຂອງເຈົ້າ ແລະ ບັນລຸຕາມຂໍ້ກຳນົດຂອງພາລະກິດຂອງພຣະເຈົ້າ. ມີພຽງແຕ່ການກະທຳຕົວຈິງປະເພດນີ້ເທົ່ານັ້ນ ຈຶ່ງສາມາດເອີ້ນວ່າການເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະອົງ. ຖ້າເຈົ້າສາມາດເຂົ້າສູ່ຄວາມເປັນຈິງນີ້ໄດ້, ເຈົ້າກໍຈະມີຄວາມຈິງ. ນີ້ແມ່ນການເລີ່ມຕົ້ນຂອງການເຂົ້າສູ່ຄວາມເປັນຈິງ; ເຈົ້າຕ້ອງຮັບເອົາການຝຶກຝົນນີ້ກ່ອນ ແລະ ເມື່ອນັ້ນເທົ່ານັ້ນ ເຈົ້າຈຶ່ງຈະສາມາດເຂົ້າສູ່ຄວາມເປັນຈິງທີ່ເລິກເຊິ່ງຍິ່ງຂຶ້ນ. ໃຫ້ພິຈາລະນາທີ່ຈະຮັກສາພຣະບັນຍັດ ແລະ ວິທີການຈົງຮັກພັກດີຕໍ່ໜ້າພຣະເຈົ້າ; ຢ່າຄິດຢູ່ເລື້ອຍໆກ່ຽວກັບວ່າເມື່ອໃດເຈົ້າຈຶ່ງຈະສາມາດເຂົ້າສູ່ອານາຈັກ. ຖ້ານິໄສຂອງເຈົ້າບໍ່ປ່ຽນແປງ, ແລ້ວ

ແມ່ນຫຍັງກໍຕາມທີ່ເຈົ້າຄິດກໍຈະໄຮ້ປະໂຫຍດ! ເພື່ອເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງໄປຮອດຈຸດທີ່ມີແນວຄິດ ແລະ ຄວາມຄິດທັງໝົດຂອງເຈົ້າສຳລັບພຣະເຈົ້າກ່ອນ, ນີ້ແມ່ນຄວາມຈຳເປັນຂັ້ນພື້ນຖານທີ່ສຸດ.

ໃນປັດຈຸບັນ, ມີຫຼາຍຄົນທີ່ຢູ່ທ່າມກາງການທົດສອບ ແລະ ບໍ່ເຂົ້າໃຈພາລະກິດຂອງພຣະເຈົ້າ, ແຕ່ເຮົາຂໍບອກເຈົ້າວ່າ: ຖ້າເຈົ້າບໍ່ເຂົ້າໃຈມັນ, ເຈົ້າກໍບໍ່ຄວນຕັດສິນກ່ຽວກັບມັນ. ບາງເທື່ອ ມັນຈະມີມື້ໜຶ່ງທີ່ຄວາມຈິງຈະປາກົດຂຶ້ນທັງໝົດ ແລະ ຫຼັງຈາກນັ້ນ ເຈົ້າກໍຈະເຂົ້າໃຈ. ການບໍ່ຕັດສິນແມ່ນຈະເປັນຜົນປະໂຫຍດໃຫ້ກັບເຈົ້າ, ແຕ່ເຈົ້າບໍ່ສາມາດພຽງແຕ່ລໍຖ້າໂດຍບໍ່ດີ້ນຣົນ. ເຈົ້າຕ້ອງສະແຫວງເພື່ອເຂົ້າຫາຢ່າງຫ້າວຫັນ; ເມື່ອນັ້ນເທົ່ານັ້ນ ເຈົ້າຈຶ່ງຈະເປັນຄົນທີ່ໄດ້ເຂົ້າແລ້ວຢ່າງແທ້ຈິງ. ຍ້ອນຄວາມກະບົດຂອງພວກເຂົາ, ຜູ້ຄົນຈຶ່ງມີແນວຄິດກ່ຽວກັບພຣະເຈົ້າທີ່ເປັນຈິງຢູ່ສະເໝີ. ສິ່ງນີ້ເຮັດໃຫ້ມັນຈຳເປັນທີ່ທຸກຄົນຈະຮຽນຮູ້ວິທີການຍອມອ່ອນນ້ອມ, ຍ້ອນພຣະເຈົ້າທີ່ເປັນຈິງຄືການທົດສອບທີ່ໃຫຍ່ຫຼວງສຳລັບມະນຸດຊາດ. ຖ້າເຈົ້າບໍ່ສາມາດຍຶດໝັ້ນໄດ້, ທຸກສິ່ງກໍຈະຈົບລົງ; ຖ້າເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບຄວາມເປັນຈິງຂອງພຣະເຈົ້າທີ່ເປັນຈິງ, ເຈົ້າກໍຈະບໍ່ສາມາດຖືກພຣະເຈົ້າເຮັດໃຫ້ສົມບູນໄດ້. ບາດກ້າວສຳຄັນທີ່ຜູ້ຄົນຈະສາມາດຖືກເຮັດໃຫ້ສົມບູນໄດ້ ຫຼື ບໍ່ ແມ່ນການທີ່ພວກເຂົາເຂົ້າໃຈຄວາມເປັນຈິງຂອງພຣະເຈົ້າ. ຄວາມເປັນຈິງຂອງການທີ່ພຣະເຈົ້າທີ່ບັງເກີດເປັນມະນຸດມາເທິງແຜ່ນດິນໂລກແມ່ນການທົດສອບສຳລັບທຸກໆຄົນ; ຖ້າເຈົ້າສາມາດຍຶດໝັ້ນໃນດ້ານນີ້, ເຈົ້າກໍເປັນຄົນທີ່ຮູ້ຈັກພຣະເຈົ້າ ແລະ ເຈົ້າຈະເປັນຄົນທີ່ຮັກພຣະອົງຢ່າງແທ້ຈິງ. ຖ້າເຈົ້າບໍ່ສາມາດຍຶດໝັ້ນໃນດ້ານນີ້ ແລະ ເຈົ້າພຽງແຕ່ເຊື່ອໃນພຣະວິນຍານ ແລະ ບໍ່ສາມາດເຊື່ອໃນຄວາມເປັນຈິງຂອງພຣະເຈົ້າ, ມັນກໍບໍ່ມີປະໂຫຍດຫຍັງ ເຖິງວ່າຄວາມເຊື່ອຂອງເຈົ້າທີ່ມີໃນພຣະເຈົ້າຈະຍິ່ງໃຫຍ່ສໍ່າໃດກໍຕາມ. ຖ້າເຈົ້າບໍ່ສາມາດເຊື່ອໃນພຣະເຈົ້າທີ່ສາມາດເບິ່ງເຫັນໄດ້, ແລ້ວເຈົ້າຈະສາມາດເຊື່ອໃນພຣະວິນຍານຂອງພຣະເຈົ້າບໍ? ເຈົ້າບໍ່ໄດ້ກຳລັງພະຍາຍາມຫຼອກລວງພຣະເຈົ້າບໍ? ເຈົ້າບໍ່ຍອມອ່ອນນ້ອມຕໍ່ໜ້າພຣະເຈົ້າທີ່ສາມາດເບິ່ງເຫັນ ແລະ ສາມາດຈັບຕ້ອງໄດ້, ສະນັ້ນ ເຈົ້າຈະສາມາດຍອມອ່ອນນ້ອມຕໍ່ພຣະວິນຍານບໍ? ພຣະວິນຍານເປັນສິ່ງທີ່ເບິ່ງບໍ່ເຫັນ ແລະ ຈັບຕ້ອງບໍ່ໄດ້, ສະນັ້ນ ເມື່ອເຈົ້າເວົ້າວ່າເຈົ້າຍອມອ່ອນນ້ອມຕໍ່ພຣະວິນຍານຂອງພຣະເຈົ້າ, ເຈົ້າບໍ່ໄດ້ພຽງແຕ່ກຳລັງເວົ້າສິ່ງທີ່ໄຮ້ສາລະບໍ? ກະແຈສູ່ການຮັກສາພຣະບັນຍັດຄືການເຂົ້າໃຈກ່ຽວກັບພຣະເຈົ້າທີ່ເປັນຈິງ. ຫຼັງຈາກທີ່ເຈົ້າມີຄວາມເຂົ້າໃຈກ່ຽວກັບພຣະເຈົ້າທີ່ເປັນຈິງ, ເຈົ້າກໍຈະສາມາດຮັກສາພຣະບັນຍັດໄດ້. ມີອົງປະກອບສອງຢ່າງໃນການຮັກສາພຣະບັນຍັດ: ຢ່າງໜຶ່ງແມ່ນການຍຶດໝັ້ນຕໍ່ແກ່ນແທ້ຂອງພຣະວິນຍານຂອງພຣະອົງ ແລະ ສາມາດຍອມຮັບການກວດສອບຂອງພຣະວິນຍານຕໍ່ໜ້າພຣະວິນຍານ; ອີກຢ່າງຄືການທີ່ສາມາດມີຄວາມເຂົ້າໃຈຢ່າງແທ້ຈິງກ່ຽວກັບເນື້ອໜັງທີ່ບັງເກີດເປັນມະນຸດ ແລະ ການບັນລຸຄວາມຍອມອ່ອນນ້ອມຢ່າງແທ້ຈິງ. ບໍ່ວ່າຈະຢູ່ຕໍ່ໜ້າເນື້ອໜັງ ຫຼື ຢູ່ຕໍ່ໜ້າພຣະວິນຍານ, ຄົນໆໜຶ່ງຕ້ອງມີການຍອມອ່ອນນ້ອມ ແລະ ການເຄົາລົບພຣະເຈົ້າຢູ່ສະເໝີ. ມີພຽງແຕ່ຄົນແບບນີ້ຈຶ່ງມີຄຸນສົມບັດທີ່ຈະຖືກເຮັດໃຫ້ສົມບູນ. ຖ້າເຈົ້າມີຄວາມເຂົ້າໃຈກ່ຽວກັບຄວາມເປັນຈິງຂອງພຣະເຈົ້າທີ່ເປັນຈິງ ເຊິ່ງນັ້ນກໍຄື ຖ້າເຈົ້າຍຶດໝັ້ນໃນການທົດສອບນີ້, ມັນກໍຈະບໍ່ມີສິ່ງໃດທີ່ຫຼາຍເກີນໄປສຳລັບເຈົ້າ.

ບາງຄົນເວົ້າວ່າ "ພຣະບັນຍັດແມ່ນງ່າຍທີ່ຈະຮັກສາ; ເຈົ້າພຽງແຕ່ຕ້ອງເວົ້າຢ່າງກົງໄປກົງມາ ແລະ ຢ່າງເຫຼື້ອມໃສເມື່ອຢູ່ຕໍ່ໜ້າພຣະເຈົ້າ ແລະ ບໍ່ສາມາດສະແດງທ່າທີອາການ; ນີ້ຄືການຮັກສາພຣະບັນຍັດ". ຖືກຕ້ອງບໍ? ດັ່ງນັ້ນ ຖ້າເຈົ້າເຮັດສອງສາມຢ່າງລັບຫຼັງພຣະເຈົ້າເຊິ່ງເປັນການຕໍ່ຕ້ານພຣະອົງ, ສິ່ງຈະຖືກວ່າເປັນການຮັກສາພຣະບັນຍັດບໍ? ເຈົ້າຕ້ອງມີຄວາມເຂົ້າໃຈຢ່າງຖີ່ຖ້ວນກ່ຽວກັບວ່າການຮັກສາພຣະບັນຍັດກ່ຽວພັນກັບຫຍັງ. ມັນກ່ຽວຂ້ອງກັບວ່າ ເຈົ້າມີຄວາມເຂົ້າໃຈທີ່ແທ້ຈິງກ່ຽວກັບຄວາມເປັນຈິງຂອງພຣະເຈົ້າ ຫຼື ບໍ່; ຖ້າເຈົ້າມີຄວາມເຂົ້າໃຈກ່ຽວກັບຄວາມເປັນຈິງ ແລະ ບໍ່ສະດຸດ ແລະ ລົ້ມລົງໃນລະຫວ່າງການທົດສອບນີ້, ກໍຖືວ່າເຈົ້າມີຄຳພະຍານທີ່ໜັກແໜ້ນ. ການເປັນພະຍານຢ່າງກ້ອງກັງວານໃຫ້ແກ່ພຣະເຈົ້າຫຼັກໆແມ່ນກ່ຽວພັນກັບວ່າເຈົ້າມີຄວາມເຂົ້າໃຈກ່ຽວກັບພຣະເຈົ້າທີ່ເປັນຈິງ ຫຼື ບໍ່ ແລະ ເຈົ້າສາມາດຍອມອ່ອນນ້ອມຕໍ່ໜ້າບຸກຄົນນີ້ທີ່ບໍ່ພຽງແຕ່ເປັນຄົນທຳມະດາ ແຕ່ຍັງເປັນຄົນປົກກະຕິ ແລະ ຍອມອ່ອນນ້ອມເຖິງແມ່ນຕ້ອງຕາຍ ຫຼື ບໍ່. ໂດຍລັກສະນະການຍອມອ່ອນນ້ອມນີ້, ຖ້າເຈົ້າເປັນພະຍານໃຫ້ກັບພຣະເຈົ້າຢ່າງແທ້ຈິງ, ນັ້ນກໍໝາຍຄວາມວ່າເຈົ້າໄດ້ຖືກຮັບເອົາໂດຍພຣະເຈົ້າແລ້ວ. ຖ້າເຈົ້າສາມາດຍອມອ່ອນນ້ອມຈົນຕາຍ ແລະ ປາສະຈາກຄຳຕໍ່ວ່າຢູ່ຕໍ່ໜ້າພຣະອົງ, ບໍ່ຕັດສິນ, ບໍ່ໃສ່ຮ້າຍປ້າຍສີ, ບໍ່ມີແນວຄິດໃດໆ ແລະ ບໍ່ມີແຮງຈູງໃຈແອບແຝງ, ໃນລັກສະນະນີ້ ພຣະເຈົ້າກໍຈະໄດ້ຮັບສະຫງ່າລາສີ. ການຍອມອ່ອນນ້ອມຕໍ່ໜ້າບຸກຄົນທຳມະດາທີ່ຖືກມະນຸດດູຖູກ ແລະ ການທີ່ສາມາດຍອມອ່ອນນ້ອມຈົນຕາຍໂດຍບໍ່ມີແນວຄິດໃດໆ, ນີ້ຄືຄຳພະຍານທີ່ແທ້ຈິງ. ຄວາມເປັນຈິງທີ່ພຣະເຈົ້າຮຽກຮ້ອງໃຫ້ຜູ້ຄົນເຂົ້າກໍຄືໃຫ້ເຈົ້າສາມາດເຊື່ອຟັງພຣະທຳຂອງພຣະອົງ, ນຳພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດ, ກົ້ມລົງຕໍ່ໜ້າພຣະເຈົ້າທີ່ເປັນຈິງ ແລະ ຮູ້ຈັກຄວາມເສື່ອມຊາມຂອງເຈົ້າເອງ, ເປີດຫົວໃຈຂອງເຈົ້າຕໍ່ໜ້າພຣະອົງ ແລະ ໃນທີ່ສຸດກໍຖືກຮັບເອົາໂດຍພຣະອົງຜ່ານພຣະທຳເຫຼົ່ານີ້ຂອງພຣະອົງ. ພຣະເຈົ້າໄດ້ຮັບສະຫງ່າລາສີເມື່ອຖ້ອຍຄຳເຫຼົ່ານີ້ໄດ້ເອົາຊະນະເຈົ້າ ແລະ ເຮັດໃຫ້ເຈົ້າເຊື່ອຟັງພຣະອົງຢ່າງສົມບູນ; ພຣະອົງເຮັດໃຫ້ຊາຕານອັບອາຍ ແລະ ສຳເລັດພາລະກິດຂອງພຣະອົງໂດຍຜ່ານສິ່ງນີ້. ເມື່ອເຈົ້າບໍ່ມີແນວຄິດໃດໆກ່ຽວກັບຄວາມເປັນຈິງຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ເຊິ່ງນັ້ນກໍຄື ເມື່ອເຈົ້າຍຶດໝັ້ນໃນການທົດສອບນີ້, ເຈົ້າກໍເປັນພະຍານໄດ້ເປັນຢ່າງດີ. ຖ້າມື້ໃດທີ່ເຈົ້າມີຄວາມເຂົ້າໃຈຢ່າງສົມບູນກ່ຽວກັບພຣະເຈົ້າທີ່ເປັນຈິງ ແລະ ສາມາດຍອມອ່ອນນ້ອມຈົນຕາຍຄືກັບເປໂຕ, ເຈົ້າກໍຈະຖືກຮັບເອົາ ແລະ ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ສິ່ງໃດໜຶ່ງທີ່ພຣະເຈົ້າເຮັດເຊິ່ງບໍ່ສອດຄ່ອງກັບແນວຄິດຂອງເຈົ້າແມ່ນການທົດສອບສຳລັບເຈົ້າ. ຖ້າພາລະກິດຂອງພຣະເຈົ້າສອດຄ່ອງກັບແນວຄິດຂອງເຈົ້າ, ມັນກໍຈະບໍ່ຮຽກຮ້ອງໃຫ້ເຈົ້າທົນທຸກ ຫຼື ຖືກຫຼໍ່ຫຼອມ. ມັນເປັນຍ້ອນພາລະກິດຂອງພຣະອົງເປັນຈິງຫຼາຍ ແລະ ບໍ່ສອດຄ່ອງກັບແນວຄິດຂອງເຈົ້າ, ມັນຈຶ່ງຮຽກຮ້ອງໃຫ້ເຈົ້າປະຖິ້ມແນວຄິດດັ່ງກ່າວ. ນີ້ຄືເຫດຜົນທີ່ມັນເປັນການທົດສອບສຳລັບເຈົ້າ. ມັນເປັນຍ້ອນຄວາມເປັນຈິງຂອງພຣະເຈົ້າ, ທຸກຄົນຈຶ່ງຢູ່ທ່າມກາງການທົດສອບຕ່າງໆ; ພາລະກິດຂອງພຣະອົງເປັນຈິງ, ບໍ່ໄດ້ຢູ່ເໜືອທຳມະຊາດ. ໂດຍການເຂົ້າໃຈພຣະທຳທີ່ເປັນຈິງຂອງພຣະອົງຢ່າງ ແລະ ຖ້ອຍຄຳທີ່ເປັນຈິງຂອງພຣະອົງຢ່າງຄົບຖ້ວນໂດຍບໍ່ມີແນວຄິດໃດໆ ແລະ ການທີ່ສາມາດຮັກພຣະອົງຢ່າງແທ້ຈິງເມື່ອພາລະກິດຂອງພຣະອົງຍິ່ງເປັນ

ຈິງຫຼາຍຂຶ້ນ, ເຈົ້າຈະກໍຖືກຮັບເອົາໂດຍພຣະອົງ. ກຸ່ມຄົນທີ່ພຣະເຈົ້າຈະຮັບເອົາແມ່ນຄົນທີ່ຮູ້ຈັກພຣະເຈົ້າ; ນັ້ນກໍຄື ຄົນທີ່ຮູ້ຈັກຄວາມເປັນຈິງຂອງພຣະອົງ. ຍິ່ງໄປກວ່ານັ້ນ, ພວກເຂົາເປັນຄົນທີ່ສາມາດຍອມອ່ອນນ້ອມຕໍ່ພາລະກິດຕົວຈິງຂອງພຣະເຈົ້າ.

ໃນຊ່ວງເວລາທີ່ພຣະເຈົ້າຢູ່ໃນເນື້ອໜັງ, ຄວາມຍອມອ່ອນນ້ອມທີ່ພຣະອົງຮຽກຮ້ອງຈາກຜູ້ຄົນບໍ່ກ່ຽວພັນກັບການຫ້າມບໍ່ໃຫ້ຕັດສິນ ຫຼື ຕໍ່ຕ້ານດັ່ງທີ່ພວກເຂົາຈິນຕະນາການ; ກົງກັນຂ້າມ, ພຣະອົງຮຽກຮ້ອງໃຫ້ຜູ້ຄົນໃຊ້ພຣະທຳຂອງພຣະອົງເປັນຫຼັກການໃນການດຳລົງຊີວິດ ແລະ ເປັນພື້ນຖານຂອງການຢູ່ລອດຂອງພວກເຂົາ, ຮຽກຮ້ອງໃຫ້ພວກເຂົານຳແກ່ນແທ້ແຫ່ງພຣະທຳຂອງພຣະອົງເຂົ້າສູ່ການປະຕິບັດຢ່າງແທ້ຈິງ ແລະ ຮຽກຮ້ອງໃຫ້ພວກເຂົາປະຕິບັດຕາມຄວາມປະສົງຂອງພຣະອົງຢ່າງສົມບູນ. ລັກສະນະໜຶ່ງຂອງການຮຽກຮ້ອງໃຫ້ຜູ້ຄົນຍອມອ່ອນນ້ອມຕໍ່ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນໝາຍເຖິງການນຳເອົາພຣະທຳຂອງພຣະອົງເຂົ້າສູ່ການປະຕິບັດ, ໃນຂະນະທີ່ອີກລັກສະນະໜຶ່ງແມ່ນໝາຍເຖິງການທີ່ສາມາດຍອມອ່ອນນ້ອມຄວາມເປັນປົກກະຕິ ແລະ ຄວາມເປັນຈິງຂອງພຣະອົງ. ທັງສອງສິ່ງນີ້ແມ່ນຕ້ອງເດັດຂາດ. ຄົນທີ່ສາມາດບັນລຸທັງສອງລັກສະນະເຫຼົ່ານີ້ລ້ວນແລ້ວແຕ່ເປັນຄົນທີ່ມີຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າໃນຫົວໃຈຂອງພວກເຂົາ. ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ຖືກພຣະເຈົ້າຮັບເອົາ ແລະ ພວກເຂົາລ້ວນແລ້ວແຕ່ຮັກພຣະເຈົ້າດັ່ງທີ່ພວກເຂົາຮັກຊີວິດຂອງພວກເຂົາເອງ. ພຣະເຈົ້າທີ່ບັງເກີດເປັນມະນຸດມີຄວາມເປັນມະນຸດທີ່ທຳມະດາ ແລະ ເປັນຈິງໃນພາລະກິດຂອງພຣະອົງ. ໃນລັກສະນະນີ້, ເປືອກນອກຂອງພຣະອົງທີ່ມີທັງຄວາມເປັນມະນຸດທີ່ທຳມະດາ ແລະ ເປັນຈິງຈຶ່ງກາຍມາເປັນການທົດສອບຢ່າງໃຫຍ່ຫຼວງສຳລັບຜູ້ຄົນ; ມັນກາຍມາເປັນຄວາມລຳບາກທີ່ສຸດຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ຄວາມເປັນປົກກະຕິ ແລະ ຄວາມເປັນຈິງຂອງພຣະເຈົ້າແມ່ນບໍ່ສາມາດຫຼີກເວັ້ນໄດ້. ພຣະອົງພະຍາຍາມທຸກສິ່ງເພື່ອຄົ້ນຫາວິທີແກ້ໄຂ, ແຕ່ໃນທີ່ສຸດແລ້ວ ພຣະອົງກໍບໍ່ສາມາດປົດປ່ອຍພຣະອົງເອງອອກຈາກເປືອກນອກຂອງຄວາມເປັນມະນຸດທີ່ທຳມະດາຂອງພຣະອົງ. ນີ້ກໍເພາະວ່າ ໃນທີ່ສຸດແລ້ວ ພຣະອົງຄືພຣະເຈົ້າທີ່ກາຍມາເປັນເນື້ອໜັງ, ບໍ່ແມ່ນພຣະເຈົ້າທີ່ເປັນພຣະວິນຍານໃນສະຫວັນ. ພຣະອົງບໍ່ແມ່ນພຣະເຈົ້າທີ່ຜູ້ຄົນບໍ່ສາມາດເຫັນໄດ້, ແຕ່ເປັນພຣະເຈົ້າທີ່ສວມເປືອກຂອງສະມາຊິກຂອງການເນລະມິດສ້າງ. ດ້ວຍເຫດນີ້, ການປົດປ່ອຍພຣະອົງເອງອອກຈາກເປືອກຂອງການເປັນມະນຸດທີ່ທຳມະດາຂອງພຣະອົງແມ່ນບໍ່ມີທາງທີ່ຈະງ່າຍເລີຍ. ສະນັ້ນ ບໍ່ວ່າຫຍັງກໍຕາມ, ພຣະອົງຍັງປະຕິບັດພາລະກິດທີ່ພຣະອົງຕ້ອງການປະຕິບັດຈາກທັດສະນະຂອງເນື້ອໜັງ. ພາລະກິດນີ້ແມ່ນການສະແດງອອກເຖິງພຣະເຈົ້າທີ່ທຳມະດາ ແລະ ເປັນຈິງ, ແລ້ວມັນຈະຖືກຕ້ອງໄດ້ແນວໃດຖ້າຜູ້ຄົນບໍ່ຍອມອ່ອນນ້ອມ? ຜູ້ຄົນສາມາດເຮັດຫຍັງໄດ້ແດ່ກ່ຽວກັບການກະທຳຂອງພຣະເຈົ້າ? ພຣະອົງເຮັດສິ່ງໃດກໍຕາມທີ່ພຣະອົງຕ້ອງການເຮັດ; ສິ່ງໃດກໍຕາມທີ່ພຣະອົງມີຄວາມສຸກນຳເປັນພຽງແຕ່ລັກສະນະທີ່ມັນເປັນ. ຖ້າຜູ້ຄົນບໍ່ຍອມອ່ອນນ້ອມ, ແລ້ວພວກເຂົາມີແຜນການອື່ນໆທີ່ດີບໍ? ຈົນມາເຖິງທຸກມື້ນີ້, ມີພຽງແຕ່ການຍອມອ່ອນນ້ອມເທົ່ານັ້ນທີ່ສາມາດຊ່ວຍຜູ້ຄົນໃຫ້ລອດພົ້ນໄດ້; ບໍ່ມີຜູ້ໃດທີ່ມີແນວຄິດອື່ນໆທີ່ສະຫຼາດແລ້ວ. ຖ້າພຣະເຈົ້າຕ້ອງການທົດສອບຜູ້ຄົນ, ພວກເຂົາສາມາດເຮັດຫຍັງໄດ້? ເຖິງຢ່າງໃດກໍຕາມ, ທັງໝົດນີ້

ບໍ່ໄດ້ຄິດຂຶ້ນໂດຍພຣະເຈົ້າທີ່ຢູ່ໃນສະຫວັນ; ມັນຖືກຄິດຂຶ້ນໂດຍພຣະເຈົ້າທີ່ບັງເກີດເປັນມະນຸດ. ພຣະອົງຕ້ອງການເຮັດສິ່ງນີ້, ສະນັ້ນ ບໍ່ມີຜູ້ໃດສາມາດປ່ຽນແປງມັນໄດ້. ພຣະເຈົ້າທີ່ຢູ່ໃນສະຫວັນກໍບໍ່ແຊກແຊງກັບສິ່ງທີ່ພຣະເຈົ້າທີ່ບັງເກີດເປັນມະນຸດເຮັດ, ສະນັ້ນ ນີ້ຍິ່ງບໍ່ແມ່ນເຫດຜົນທີ່ຜູ້ຄົນຄວນຍອມອ່ອນນ້ອມຕໍ່ພຣະອົງບໍ? ເຖິງແມ່ນວ່າພຣະອົງທັງເປັນຈິງ ແລະ ເປັນປົກກະຕິ, ພຣະອົງກໍເປັນພຣະເຈົ້າທີ່ກາຍເປັນເນື້ອໜັງໂດຍສົມບູນ. ອີງຕາມແນວຄິດຂອງພຣະອົງເອງ, ພຣະອົງເຮັດສິ່ງທີ່ພຣະອົງຕ້ອງການເຮັດ. ພຣະເຈົ້າທີ່ຢູ່ໃນສະຫວັນໄດ້ມອບໜ້າວຽກທັງໝົດໃຫ້ກັບພຣະອົງ; ເຈົ້າຕ້ອງຍອມອ່ອນນ້ອມຕໍ່ສິ່ງທີ່ພຣະອົງເຮັດ. ເຖິງແມ່ນວ່າພຣະອົງມີຄວາມເປັນມະນຸດ ແລະ ທຳມະດາຫຼາຍ, ພຣະອົງກໍຕັ້ງໃຈຈັດແຈງທຸກສິ່ງນີ້, ສະນັ້ນ ຜູ້ຄົນຈະສາມາດຫຼຽວເບິ່ງພຣະອົງດ້ວຍສາຍຕາເປີດກວ້າງທີ່ບໍ່ເຫັນພ້ອມໄດ້ແນວໃດ? ພຣະອົງຕ້ອງການເປັນຄົນທຳມະດາ, ສະນັ້ນ ພຣະອົງຈຶ່ງເປັນຄົນທຳມະດາ. ພຣະອົງຕ້ອງການດຳລົງຊີວິດພາຍໃນຄວາມເປັນມະນຸດ, ສະນັ້ນ ພຣະອົງຈຶ່ງດຳລົງຊີວິດພາຍໃນຄວາມເປັນມະນຸດ. ພຣະອົງຕ້ອງການດຳລົງຊີວິດພາຍໃນຄວາມເປັນພຣະເຈົ້າ, ສະນັ້ນ ພຣະອົງຈຶ່ງດຳລົງຊີວິດພາຍໃນຄວາມເປັນພຣະເຈົ້າ. ຜູ້ຄົນສາມາດເຫັນມັນໃນລັກສະນະໃດກໍຕາມທີ່ພວກເຂົາຕ້ອງການ, ແຕ່ພຣະເຈົ້າຈະເປັນພຣະເຈົ້າຢູ່ສະເໝີ ແລະ ມະນຸດກໍຈະເປັນມະນຸດຢູ່ສະເໝີ. ແກ່ນແທ້ຂອງພຣະອົງບໍ່ສາມາດຖືກປະຕິເສດໄດ້ຍ້ອນບາງສິ່ງທີ່ເລັກໆນ້ອຍໆ ຫຼື ພຣະອົງບໍ່ສາມາດຖືກຜັກດັນອອກຈາກ "ຕົວຕົນ" ຂອງພຣະເຈົ້າຍ້ອນສິ່ງເລັກໆນ້ອຍໆພຽງສິ່ງດຽວ. ຜູ້ຄົນມີອິດສະຫຼະຂອງມະນຸດ ແລະ ພຣະເຈົ້າມີກຽດສັກສີຂອງພຣະເຈົ້າ; ສິ່ງເຫຼົ່ານີ້ບໍ່ໄດ້ແຊກແຊງກັນ. ຜູ້ຄົນບໍ່ສາມາດໃຫ້ອິດສະຫຼະເລັກໆນ້ອຍໆແກ່ພຣະເຈົ້າບໍ? ພວກເຂົາບໍ່ສາມາດອົດທົນຕໍ່ການທີ່ພຣະເຈົ້າເປັນຄົນທຳມະດາອີກໜ້ອຍໜຶ່ງບໍ? ຢ່າເຄັ່ງຄັດຫຼາຍກັບພຣະເຈົ້າ! ແຕ່ລະຄົນຄວນມີຄວາມອົດທົນຕໍ່ກັນ; ແລ້ວທຸກສິ່ງຈະບໍ່ຈົບລົງບໍ? ຄວາມຫຍຸ້ງຍາກຍັງຈະມີຢູ່ບໍ? ຖ້າຄົນໆໜຶ່ງບໍ່ສາມາດອົດທົນຕໍ່ສິ່ງເລັກນ້ອຍດັ່ງກ່າວໄດ້, ແລ້ວພວກເຂົາຈະສາມາດເວົ້າສິ່ງໃດໜຶ່ງປະມານວ່າ "ຫົວໃຈຂອງນາຍົກລັດຖະມົນຕີໃຫຍ່ພໍທີ່ຈະລ່ອງເຮືອໄດ້" ໄດ້ແນວໃດ? ພວກເຂົາຈະສາມາດເປັນມະນຸດທີ່ແທ້ຈິງໄດ້ແນວໃດ? ບໍ່ແມ່ນພຣະເຈົ້າທີ່ກໍ່ໃຫ້ເກີດຄວາມຫຍຸ້ງຍາກສຳລັບມະນຸດຊາດ, ແຕ່ເປັນມະນຸດຊາດທີ່ສ້າງຄວາມຫຍຸ້ງຍາກສຳລັບພຣະເຈົ້າ. ພວກເຂົາຈັດການກັບສິ່ງຕ່າງໆໂດຍສ້າງພູເຂົາອອກຈາກໂພນປວກຢູ່ສະເໝີ. ພວກເຂົາເຮັດບາງສິ່ງອອກຈາກຄວາມວ່າງເປົ່າແທ້ໆ ແລະ ມັນບໍ່ຈຳເປັນເລີຍ! ເມື່ອພຣະເຈົ້າປະຕິບັດພາລະກິດພາຍໃນຄວາມເປັນມະນຸດທີ່ທຳມະດາ ແລະ ເປັນຈິງ, ສິ່ງທີ່ພຣະອົງປະຕິບັດບໍ່ແມ່ນພາລະກິດຂອງມະນຸດຊາດ, ແຕ່ເປັນພາລະກິດຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ, ຜູ້ຄົນບໍ່ເຫັນແກ່ນແທ້ຂອງພາລະກິດຂອງພຣະອົງ; ພວກເຂົາເຫັນແຕ່ເປືອກນອກຂອງຄວາມເປັນມະນຸດຂອງພຣະອົງຢູ່ສະເໝີ. ພວກເຂົາບໍ່ເຫັນພາລະກິດທີ່ຍິ່ງໃຫຍ່ດັ່ງກ່າວ, ແຕ່ພວກເຂົາສືບຕໍ່ເຫັນພຽງຄວາມເປັນມະນຸດທີ່ປົກກະຕິ ແລະ ທຳມະດາຂອງພຣະອົງ ແລະ ຈະບໍ່ປ່ອຍມັນໄປ. ສິ່ງນີ້ຈະສາມາດຖືກເອີ້ນວ່າການຍອມອ່ອນນ້ອມຕໍ່ໜ້າພຣະເຈົ້າໄດ້ແນວໃດ? ພຣະເຈົ້າທີ່ຢູ່ໃນສະຫວັນໄດ້ "ກາຍເປັນ" ພຣະເຈົ້າເທິງແຜ່ນດິນໂລກໃນຕອນນີ້ ແລະ ບັດນີ້ ພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກກໍຄືພຣະເຈົ້າທີ່ຢູ່ໃນສະຫວັນ. ມັນບໍ່ສຳຄັນວ່າລັກສະນະພາຍນອກ

ຂອງພວກພຣະອົງຈະຄ້າຍຄືກັນ ຫຼື ມັນບໍ່ສຳຄັນວ່າພວກພຣະອົງເຮັດພາລະກິດແນວໃດແທ້ໆ. ໃນທີ່ສຸດແລ້ວ, ພຣະອົງທີ່ປະຕິບັດພາລະກິດຂອງພຣະເຈົ້າເອງກໍຄືພຣະເຈົ້າເອງ. ເຈົ້າຕ້ອງຍອມອ່ອນນ້ອມບໍ່ວ່າເຈົ້າຈະຕ້ອງການ ຫຼື ບໍ່, ນີ້ບໍ່ແມ່ນສິ່ງທີ່ພວກເຈົ້າສາມາດເລືອກໄດ້! ມະນຸດຕ້ອງເຊື່ອຟັງພຣະເຈົ້າ ແລະ ມະນຸດຕ້ອງຍອມອ່ອນນ້ອມຕໍ່ພຣະເຈົ້າຢ່າງແທ້ຈິງໂດຍບໍ່ມີການທຳທ່າແມ່ນແຕ່ໜ້ອຍດຽວ.

ກຸ່ມຄົນທີ່ພຣະເຈົ້າທີ່ບັງເກີດເປັນມະນຸດ ຕ້ອງການຮັບເອົາໃນປັດຈຸບັນແມ່ນຄົນທີ່ປະຕິບັດຕາມຄວາມປະສົງຂອງພຣະອົງ. ພວກເຂົາຈຳເປັນຕ້ອງຍອມອ່ອນນ້ອມຕໍ່ພາລະກິດຂອງພຣະອົງເທົ່ານັ້ນ ແລະ ຢຸດກັງວົນກັບແນວຄິດທີ່ກ່ຽວກັບພຣະເຈົ້າຢູ່ໃນສະຫວັນ, ດຳລົງຊີວິດຢູ່ກັບຄວາມບໍ່ຊັດເຈນ ແລະ ເຮັດໃຫ້ສິ່ງຕ່າງໆຫຍຸ້ງຍາກສຳລັບພຣະເຈົ້າທີ່ຢູ່ໃນເນື້ອໜັງ. ຄົນທີ່ສາມາດເຊື່ອຟັງພຣະອົງແມ່ນຄົນທີ່ຟັງພຣະທຳຂອງພຣະອົງ ແລະ ຍອມອ່ອນນ້ອມຕໍ່ການຈັດແຈງຂອງພຣະອົງຢ່າງແທ້ຈິງ. ຄົນດັ່ງກ່າວບໍ່ສົນໃຈເລີຍວ່າພຣະເຈົ້າທີ່ຢູ່ສະຫວັນອາດເປັນແບບໃດແທ້ໆ ຫຼື ພຣະເຈົ້າທີ່ຢູ່ໃນສະຫວັນອາດປະຕິບັດພາລະກິດປະເພດໃດໃນທ່າມກາງມະນຸດຊາດໃນປັດຈຸບັນ; ພວກເຂົາມອບຫົວໃຈຂອງພວກເຂົາໃຫ້ກັບພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກຢ່າງສົມບູນ ແລະ ພວກເຂົາວາງການເປັນຢູ່ທັງໝົດຂອງພວກເຂົາຕໍ່ໜ້າພຣະອົງ. ພວກເຂົາບໍ່ເຄີຍຄຳນຶງເຖິງຄວາມປອດໄພຂອງພວກເຂົາເອງ ຫຼື ພວກເຂົາບໍ່ເຄີຍວິຕົກກັງວົນກັບຄວາມທຳມະດາ ແລະ ຄວາມເປັນຈິງຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ. ຄົນທີ່ຍອມອ່ອນນ້ອມຕໍ່ພຣະເຈົ້າໃນເນື້ອໜັງສາມາດຖືກພຣະອົງເຮັດໃຫ້ສົມບູນໄດ້. ຄົນທີ່ເຊື່ອໃນພຣະເຈົ້າທີ່ຢູ່ໃນສະຫວັນຈະບໍ່ໄດ້ຮັບຫຍັງເລີຍ. ນີ້ກໍຍ້ອນວ່າ ບໍ່ແມ່ນພຣະເຈົ້າທີ່ຢູ່ໃນສະຫວັນ, ແຕ່ເປັນພຣະເຈົ້າເທິງແຜ່ນດິນໂລກທີ່ປະທານຄຳສັນຍາ ແລະ ພອນໃຫ້ກັບຜູ້ຄົນ. ຜູ້ຄົນບໍ່ຄວນສັນລະເສີນພຣະເຈົ້າທີ່ຢູ່ໃນສະຫວັນຢູ່ສະເໝີ ໃນຂະນະທີ່ເຫັນພຣະເຈົ້າເທິງແຜ່ນດິນໂລກເປັນບຸກຄົນທຳມະດາ; ນີ້ບໍ່ຍຸຕິທຳເລີຍ. ພຣະເຈົ້າທີ່ຢູ່ໃນສະຫວັນຍິ່ງໃຫຍ່ ແລະ ມະຫັດສະຈັນໂດຍທີ່ມີສະຕິປັນຍາທີ່ລ້ຳເລີດ, ແຕ່ສິ່ງນີ້ບໍ່ມີຢູ່ຈິງເລີຍ; ພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກເປັນພຣະເຈົ້າທີ່ມີລະດັບປານກາງ ແລະ ບໍ່ສຳຄັນເລີຍ ແລະ ຍັງທຳມະດາຫຼາຍ. ພຣະອົງບໍ່ມີຈິດໃຈເໜືອທຳມະຊາດ ຫຼື ເຮັດການກະທຳທີ່ສະທ້ານໂລກ; ພຣະອົງພຽງແຕ່ປະຕິບັດພາລະກິດ ແລະ ກ່າວໃນລັກສະນະທີ່ທຳມະດາ ແລະ ເປັນຈິງຫຼາຍ. ໃນຂະນະທີ່ພຣະອົງບໍ່ໄດ້ກ່າວຜ່ານສຽງຟ້າຮ້ອງ ຫຼື ເອີ້ນລົມ ແລະ ຝົນ, ພຣະອົງຄືການບັງເກີດເປັນມະນຸດຂອງພຣະເຈົ້າທີ່ຢູ່ໃນສະຫວັນຢ່າງແທ້ຈິງ ແລະ ພຣະອົງກໍເປັນພຣະເຈົ້າທີ່ດຳລົງຊີວິດຢູ່ທ່າມກາງມະນຸດຢ່າງແທ້ຈິງ. ຜູ້ຄົນຕ້ອງບໍ່ຍົກຍ້ອງຄົນທີ່ພວກເຂົາສາມາດເຂົ້າໃຈ ແລະ ຄົນທີ່ສອດຄ່ອງກັບຈິນຕະນາການຂອງພວກເຂົາເອງວ່າເປັນພຣະເຈົ້າ ໃນຂະນະທີ່ເຫັນຄົນທີ່ພວກເຂົາບໍ່ສາມາດຍອມຮັບ ແລະ ບໍ່ສາມາດຈິນຕະນາການໄດ້ວ່າເປັນຜູ້ຕ້ອຍຕ່ຳ. ທັງໝົດນີ້ແມ່ນມາຈາກຄວາມກະບົດຂອງຜູ້ຄົນ; ມັນລ້ວນແລ້ວແຕ່ເປັນແຫຼ່ງກຳເນີດຂອງການຕໍ່ຕ້ານຂອງມະນຸດຊາດຕໍ່ພຣະເຈົ້າ.

# ຄົນທີ່ຈະຖືກເຮັດໃຫ້ສົມບູນຕ້ອງຜ່ານການຫຼໍ່ຫຼອມ

ຖ້າເຈົ້າເຊື່ອໃນພຣະເຈົ້າ, ແລ້ວເຈົ້າກໍຕ້ອງເຊື່ອຟັງພຣະເຈົ້າ, ນໍາຄວາມຈິງເຂົ້າສູ່ການປະຕິບັດ ແລະ ປະຕິບັດໜ້າທີ່ທັງໝົດຂອງເຈົ້າ. ຍິ່ງໄປກວ່ານັ້ນ, ເຈົ້າຕ້ອງເຂົ້າໃຈສິ່ງຕ່າງໆທີ່ເຈົ້າຄວນຜະເຊີນ. ຖ້າເຈົ້າພຽງແຕ່ຜະເຊີນກັບການຖືກຈັດການ, ການຖືກລົງວິໄນ ແລະ ການຖືກພິພາກສາ, ຖ້າເຈົ້າພຽງແຕ່ມີຄວາມສຸກກັບພຣະເຈົ້າ, ແຕ່ຍັງບໍ່ສາມາດຮູ້ສຶກເຖິງເວລາທີ່ພຣະເຈົ້າກໍາລັງລົງວິໄນເຈົ້າ ຫຼື ຈັດການກັບເຈົ້າ, ສິ່ງນີ້ເປັນເລື່ອງທີ່ຮັບບໍ່ໄດ້. ບາງເທື່ອໃນຕົວຢ່າງຂອງການຫຼໍ່ຫຼອມແບບນີ້ ເຈົ້າສາມາດຍຶດໝັ້ນໃນຈຸດຢືນຂອງເຈົ້າ, ແຕ່ນີ້ກໍຍັງບໍ່ພຽງພໍ; ເຈົ້າຍັງຕ້ອງກ້າວໄປຂ້າງໜ້າ. ບົດຮຽນກ່ຽວກັບການຮັກພຣະເຈົ້າບໍ່ເຄີຍສິ້ນສຸດ ແລະ ບໍ່ມີຈຸດຈົບຈັກເທື່ອ. ຜູ້ຄົນເຫັນວ່າ ການເຊື່ອພຣະເຈົ້າເປັນສິ່ງທີ່ງ່າຍດາຍຫຼາຍ, ແຕ່ທັນທີທີ່ພວກເຂົາໄດ້ຮັບປະສົບການຕົວຈິງບາງຢ່າງ, ແລ້ວພວກເຂົາຈະເຂົ້າໃຈວ່າ ຄວາມເຊື່ອໃນພຣະເຈົ້າບໍ່ໄດ້ງ່າຍຕາມທີ່ຜູ້ຄົນຈິນຕະນາການ. ເມື່ອພຣະເຈົ້າປະຕິບັດພາລະກິດເພື່ອຫຼໍ່ຫຼອມມະນຸດ, ມະນຸດກໍຈະທົນທຸກ. ຍິ່ງການຫຼໍ່ຫຼອມຂອງບຸກຄົນໃດໜຶ່ງຍິ່ງໃຫຍ່ຫຼາຍສໍ່າໃດ, ຄວາມຮັກທີ່ພວກເຂົາມີຕໍ່ພຣະເຈົ້າກໍຍິ່ງໃຫຍ່ຫຼາຍສໍ່ານັ້ນ ແລະ ຄວາມຍິ່ງໃຫຍ່ຂອງພຣະເຈົ້າກໍຖືກເປີດເຜີຍໃນຕົວພວກເຂົາຫຼາຍສໍ່ານັ້ນ. ໃນທາງກົງກັນຂ້າມ ຍິ່ງບຸກຄົນໃດໜຶ່ງໄດ້ຮັບການຫຼໍ່ຫຼອມໜ້ອຍສໍ່າໃດ, ຄວາມຮັກທີ່ເຂົາມີຕໍ່ພຣະເຈົ້າກໍມີໜ້ອຍສໍ່ານັ້ນ ແລະ ຄວາມຍິ່ງໃຫຍ່ຂອງພຣະເຈົ້າກໍຖືກເປີດເຜີຍໃນຕົວເຂົາໜ້ອຍສໍ່ານັ້ນ. ຍິ່ງການຫຼໍ່ຫຼອມ ແລະ ຄວາມເຈັບປວດຂອງບຸກຄົນໃດໜຶ່ງຍິ່ງໃຫຍ່ຫຼາຍສໍ່າໃດ ແລະ ຍິ່ງຄວາມທໍລະມານທີ່ພວກເຂົາຜະເຊີນມີຫຼາຍສໍ່າໃດ, ຄວາມຮັກຂອງພວກເຂົາຕໍ່ພຣະເຈົ້າຈະຍິ່ງເຕີບໃຫຍ່ຫຼາຍສໍ່ານັ້ນ, ຄວາມເຊື່ອຂອງເຂົາທີ່ມີໃນພຣະເຈົ້າກໍແທ້ຈິງຫຼາຍຍິ່ງຂຶ້ນ ແລະ ຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າກໍຍິ່ງເລິກເຊິ່ງຫຼາຍຂຶ້ນ. ໃນປະສົບການຂອງເຈົ້າ, ເຈົ້າຈະເຫັນວ່າ ຄົນທີ່ທົນທຸກຢ່າງຫຼາຍໃນຂະນະທີ່ພວກເຂົາຖືກຫຼໍ່ຫຼອມ, ຄົນທີ່ຖືກຈັດການ ແລະ ຖືກລົງວິໄນຢ່າງຫຼາຍ ແລະ ເຈົ້າຈະເຫັນວ່າ ມັນແມ່ນຄົນເຫຼົ່ານີ້ທີ່ມີຄວາມຮັກຢ່າງເລິກເຊິ່ງສໍາລັບພຣະເຈົ້າ ແລະ ຄວາມຮູ້ທີ່ເລິກເຊິ່ງ ແລະ ແຫຼມຄົມກ່ຽວກັບພຣະເຈົ້າຫຼາຍຍິ່ງຂຶ້ນ. ຄົນທີ່ບໍ່ໄດ້ຜະເຊີນກັບການຖືກຈັດການກໍມີພຽງຄວາມຮູ້ຕື້ນໆ ແລະ ພວກເຂົາພຽງແຕ່ສາມາດເວົ້າໄດ້ວ່າ "ພຣະເຈົ້າແສນດີ, ພຣະອົງປະທານຄວາມເມດຕາໃຫ້ກັບຜູ້ຄົນ ເພື່ອພວກເຂົາສາມາດມີຄວາມສຸກກັບພຣະອົງໄດ້". ຖ້າຜູ້ຄົນໄດ້ຜະເຊີນກັບການຖືກຈັດການ ແລະ ການຖືກລົງວິໄນ, ແລ້ວພວກເຂົາສາມາດເວົ້າດ້ວຍຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າ. ສະນັ້ນ ຍິ່ງພາລະກິດຂອງພຣະເຈົ້າທີ່ຢູ່ໃນມະນຸດມະຫັດສະຈັນຫຼາຍສໍ່າໃດ, ພາລະກິດນັ້ນກໍຍິ່ງມີຄ່າ ແລະ ມີຄວາມໝາຍຫຼາຍສໍ່ານັ້ນ. ຍິ່ງພາລະກິດນັ້ນເປັນສິ່ງທີ່ເຂົ້າໃຈຍາກສໍາລັບເຈົ້າຫຼາຍສໍ່າໃດ ແລະ ຍິ່ງມັນບໍ່ສອດຄ່ອງກັບແນວຄິດຂອງເຈົ້າຫຼາຍສໍ່າໃດ, ພາລະກິດຂອງພຣະເຈົ້າກໍຍິ່ງສາມາດເອົາຊະນະເຈົ້າ, ຮັບເອົາເຈົ້າ ແລະ ເຮັດໃຫ້ເຈົ້າສົມບູນຫຼາຍສໍ່ານັ້ນ. ຄວາມໝາຍແຫ່ງພາລະກິດຂອງພຣະເຈົ້າຊ່າງຍິ່ງໃຫຍ່ຫຼາຍ! ຖ້າພຣະເຈົ້າບໍ່ຫຼໍ່ຫຼອມມະນຸດໃນລັກສະນະນີ້, ຖ້າພຣະອົງບໍ່ປະຕິບັດພາລະກິດດ້ວຍວິທີນີ້, ແລ້ວພາລະກິດຂອງພຣະເຈົ້າກໍຈະບໍ່ມີປະໂຫຍດ ແລະ ບໍ່ມີຄວາມໝາຍເລີຍ.

ມັນຖືກເວົ້າໃນອະດີດວ່າ ພຣະເຈົ້າຈະຄັດເລືອກ ແລະ ຮັບເອົາກຸ່ມນີ້ ແລະ ເຮັດໃຫ້ພວກເຂົາສົມບູນໃນຍຸກສຸດທ້າຍ; ໃນນີ້, ມີຄວາມໝາຍທີ່ພິເສດ. ຍິ່ງພາລະກິດທີ່ພຣະເຈົ້າປະຕິບັດພາຍໃນພວກເຈົ້າຍິ່ງໃຫຍ່ຫຼາຍສໍ່າໃດ, ຄວາມຮັກຂອງພວກເຈົ້າທີ່ມີຕໍ່ພຣະເຈົ້າກໍເລິກເຊິ່ງ ແລະ ບໍລິສຸດຫຼາຍສໍ່ານັ້ນ. ຍິ່ງພາລະກິດຂອງພຣະເຈົ້າຍິ່ງໃຫຍ່ຫຼາຍສໍ່າໃດ, ມະນຸດກໍຍິ່ງສາມາດເຂົ້າໃຈເຖິງບາງສິ່ງກ່ຽວກັບສະຕິປັນຍາຂອງພຣະອົງຫຼາຍສໍ່ານັ້ນ ແລະ ຄວາມຮູ້ຂອງມະນຸດກ່ຽວກັບພຣະອົງກໍຍິ່ງເລິກເຊິ່ງຫຼາຍສໍ່ານັ້ນ. ໃນລະຫວ່າງຍຸກສຸດທ້າຍ, ແຜນການສໍາລັບການຄຸ້ມຄອງຫົກພັນປີຂອງພຣະເຈົ້າຈະມາເຖິງຈຸດສິ້ນສຸດ. ເປັນໄປໄດ້ບໍທີ່ມັນຈະຈົບແບບງ່າຍໆແທ້ໆ? ຫຼັງຈາກພຣະອົງເອົາຊະນະມະນຸດຊາດ, ພາລະກິດຂອງພຣະອົງກໍຈະຢຸດໄປເລີຍບໍ? ມັນງ່າຍແບບນັ້ນເລີຍບໍ? ຜູ້ຄົນຈິນຕະນາການວ່າມັນງ່າຍແບບນີ້, ແຕ່ສິ່ງທີ່ພຣະເຈົ້າກະທໍາບໍ່ໄດ້ງ່າຍແບບນັ້ນ. ບໍ່ວ່າເຈົ້າຈະເວົ້າເຖິງສ່ວນໃດກໍຕາມຂອງພາລະກິດຂອງພຣະເຈົ້າ, ມະນຸດກໍບໍ່ສາມາດຢັ່ງເຖິງທຸກຢ່າງໄດ້. ຖ້າເຈົ້າສາມາດຢັ່ງເຖິງພາລະກິດນັ້ນໄດ້, ແລ້ວພາລະກິດຂອງພຣະເຈົ້າກໍຈະບໍ່ມີຄວາມໝາຍ ຫຼື ບໍ່ມີຄ່າເລີຍ. ພາລະກິດທີ່ພຣະເຈົ້າກະທໍາແມ່ນບໍ່ສາມາດຢັ່ງເຖິງໄດ້; ມັນບໍ່ສອດຄ່ອງກັບແນວຄິດຂອງເຈົ້າທັງສິ້ນ ແລະ ຍິ່ງມັນບໍ່ເຂົ້າກັບແນວຄິດຂອງເຈົ້າຫຼາຍສໍ່າໃດ, ມັນກໍຍິ່ງສະແດງໃຫ້ເຫັນວ່າພາລະກິດຂອງພຣະເຈົ້າມີຄວາມໝາຍຫຼາຍສໍ່ານັ້ນ; ຖ້າມັນເຂົ້າກັນກັບແນວຄິດຂອງເຈົ້າ, ແລ້ວມັນກໍຈະບໍ່ມີຄວາມໝາຍເລີຍ. ໃນປັດຈຸບັນ, ເຈົ້າຮູ້ສຶກວ່າພາລະກິດຂອງພຣະເຈົ້າມະຫັດສະຈັນຫຼາຍ ແລະ ຍິ່ງມັນມະຫັດສະຈັນຫຼາຍສໍ່າໃດ, ເຈົ້າຍິ່ງຈະຮູ້ສຶກວ່າພຣະເຈົ້າບໍ່ສາມາດຢັ່ງເຖິງຫຼາຍສໍ່ານັ້ນ ແລະ ເຈົ້າຈະເຫັນວ່າການກະທໍາຂອງພຣະເຈົ້າຍິ່ງໃຫຍ່ສໍ່າໃດ. ຖ້າພຣະອົງພຽງແຕ່ປະຕິບັດພາລະກິດບາງຢ່າງທີ່ຜິວເຜີນ ແລະ ພໍເປັນພິທີເພື່ອເອົາຊະນະມະນຸດ ແລະ ບໍ່ເຮັດຫຍັງເລີຍຫຼັງຈາກນັ້ນ, ແລ້ວມະນຸດກໍຈະບໍ່ສາມາດເຫັນເຖິງຄວາມໝາຍຂອງພາລະກິດຂອງພຣະເຈົ້າໄດ້. ເຖິງແມ່ນວ່າເຈົ້າກໍາລັງຮັບການຫຼໍ່ຫຼອມພຽງເລັກນ້ອຍໃນຕອນນີ້, ມັນກໍເປັນປະໂຫຍດຢ່າງໃຫຍ່ຕໍ່ການເຕີບໃຫຍ່ໃນຊີວິດຂອງເຈົ້າ; ດັ່ງນັ້ນ ມັນຈໍາເປັນທີ່ສຸດທີ່ພວກເຈົ້າຈະຜ່ານຄວາມລໍາບາກດັ່ງກ່າວ. ໃນປັດຈຸບັນ, ເຈົ້າກໍາລັງຮັບການຫຼໍ່ຫຼອມທີ່ເລັກນ້ອຍ, ແຕ່ຫຼັງຈາກນັ້ນ ເຈົ້າຈະສາມາດເຫັນເຖິງການກະທໍາຂອງພຣະເຈົ້າຢ່າງແທ້ຈິງ ແລະ ໃນທີ່ສຸດ ເຈົ້າຈະເວົ້າວ່າ “ການກະທໍາຂອງພຣະເຈົ້າມະຫັດສະຈັນຫຼາຍ!” ສິ່ງເຫຼົ່ານີ້ຈະເປັນຄໍາເວົ້າໃນຫົວໃຈຂອງເຈົ້າ. ເມື່ອໄດ້ພະເຊີນກັບການຫຼໍ່ຫຼອມຂອງພຣະເຈົ້າຊົ່ວໄລຍະໜຶ່ງ (ການທົດລອງຂອງຜູ້ບໍລິການ ແລະ ເວລາແຫ່ງການຂ້ຽນຕີ), ໃນທີ່ສຸດບາງຄົນກໍເວົ້າວ່າ “ການເຊື່ອໃນພຣະເຈົ້າເປັນສິ່ງທີ່ຫຍຸ້ງຍາກແທ້ໆ!” ຂໍ້ແທ້ຈິງທີ່ພວກເຂົາໃຊ້ຄໍາວ່າ “ຫຍຸ້ງຍາກແທ້ໆ” ສະແດງໃຫ້ເຫັນວ່າ ການກະທໍາຂອງພຣະເຈົ້າບໍ່ສາມາດຢັ່ງເຖິງໄດ້, ພາລະກິດຂອງພຣະເຈົ້າປະກອບດ້ວຍຄວາມໝາຍ ແລະ ຄຸນຄ່າຢ່າງໃຫຍ່ຫຼວງ ແລະ ພາລະກິດຂອງພຣະອົງສົມຄວນຢ່າງສູງແກ່ການທີ່ມະນຸດເຊີດຊູບູຊາ. ຫຼັງຈາກທີ່ເຮົາໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍ, ຖ້າເຈົ້າຍັງບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວ, ແລ້ວພາລະກິດຂອງເຮົາຈະຍັງມີຄຸນຄ່າບໍ? ມັນຈະເຮັດໃຫ້ເຈົ້າເວົ້າວ່າ “ການຮັບໃຊ້ພຣະເຈົ້າແມ່ນຫຍຸ້ງຍາກແທ້ໆ, ການກະທໍາຂອງພຣະເຈົ້າມະຫັດສະຈັນຫຼາຍ ແລະ ພຣະເຈົ້າມີສະຕິປັນຍາແທ້ໆ! ພຣະອົງເປັນຕາຮັກຫຼາຍ!” ຫຼັງຈາກທີ່ໄດ້ຜ່ານໄລຍະເວລາແຫ່ງປະສົບການໃດ

ໜຶ່ງ, ຖ້າເຈົ້າສາມາດກ່າວຄຳເວົ້າດັ່ງກ່າວ, ແລ້ວສິ່ງນີ້ກໍພິສູດວ່າ ເຈົ້າໄດ້ຮັບເອົາພາລະກິດຂອງພຣະເຈົ້າທີ່ຢູ່ໃນຕົວເຈົ້າ. ມື້ໜຶ່ງ, ເມື່ອເຈົ້າເດີນທາງເພື່ອເຜີຍແຜ່ຂ່າວປະເສີດຢູ່ຕ່າງປະເທດ ແລະ ບາງຄົນຖາມເຈົ້າວ່າ "ຄວາມເຊື່ອຂອງເຈົ້າໃນພຣະເຈົ້າເປັນແນວໃດ?" ເຈົ້າຈະສາມາດເວົ້າໄດ້ວ່າ "ການກະທຳຂອງພຣະເຈົ້າໜ້າປະຫຼາດໃຈຫຼາຍ!" ພວກເຂົາຈະຮູ້ສຶກວ່າ ຄຳເວົ້າຂອງເຈົ້າແມ່ນເວົ້າຈາກປະສົບການທີ່ເປັນຈິງ. ນີ້ແມ່ນການເປັນພະຍານຢ່າງແທ້ຈິງ. ເຈົ້າຈະເວົ້າວ່າ ພາລະກິດຂອງພຣະເຈົ້າເຕັມໄປດ້ວຍສະຕິປັນຍາ ແລະ ພາລະກິດຂອງພຣະອົງທີ່ຢູ່ໃນຕົວເຈົ້າກໍໄດ້ເຮັດໃຫ້ເຈົ້າເຊື່ອຢ່າງແທ້ຈິງ ແລະເອົາຊະນະຫົວໃຈຂອງເຈົ້າໄດ້. ເຈົ້າຈະຮັກພຣະອົງຢູ່ສະເໝີ ເພາະວ່າ ພຣະອົງສົມຄວນເກີນກວ່າທີ່ຈະໄດ້ຮັບຄວາມຮັກຂອງມະນຸດຊາດ! ຖ້າເຈົ້າສາມາດເວົ້າສິ່ງເຫຼົ່ານີ້ໄດ້, ແລ້ວເຈົ້າກໍສາມາດດົນໃຈຜູ້ຄົນໄດ້. ທຸກສິ່ງເຫຼົ່ານີ້ແມ່ນການເປັນພະຍານ. ຖ້າເຈົ້າສາມາດເປັນພະຍານໄດ້ຢ່າງດັງກ້ອງ, ດົນໃຈຜູ້ຄົນໃຫ້ຫຼັ່ງນ້ຳຕາ, ນັ້ນກໍສະແດງໃຫ້ເຫັນວ່າ ເຈົ້າເປັນຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ, ຍ້ອນເຈົ້າສາມາດເປັນພະຍານເຖິງການຮັກພຣະເຈົ້າ ແລະ ຜ່ານເຈົ້າ ການກະທຳຂອງພຣະເຈົ້າກໍສາມາດເກີດຂຶ້ນໃນຄຳພະຍານ. ໂດຍຄຳພະຍານຂອງເຈົ້າ, ຄົນອື່ນກໍຕ້ອງບັງຄັບໃຫ້ສະແຫວງຫາພາລະກິດຂອງພຣະເຈົ້າ, ມີປະສົບການກັບພາລະກິດຂອງພຣະເຈົ້າ ແລະ ໃນສະພາບແວດລ້ອມໃດກໍຕາມທີ່ພວກເຂົາພະເຊີນ, ພວກເຂົາກໍຈະສາມາດຍຶດໝັ້ນ. ນີ້ແມ່ນພຽງຫົນທາງດຽວທີ່ແທ້ຈິງໃນການເປັນພະຍານ ແລະ ນີ້ແມ່ນສິ່ງທີ່ຮຽກຮ້ອງຈາກເຈົ້າຢ່າງແທ້ຈິງໃນຕອນນີ້. ເຈົ້າຄວນເຫັນວ່າ ພາລະກິດຂອງພຣະເຈົ້າມີຄ່າຫຼາຍທີ່ສຸດ ແລະສົມຄວນແກ່ການເຊີດຊູບູຊາໂດຍຜູ້ຄົນ, ພຣະເຈົ້າມີຄ່າຫຼາຍ ແລະ ບໍລິບູນຫຼາຍ; ພຣະອົງບໍ່ພຽງແຕ່ສາມາດເວົ້າ, ແຕ່ຍິ່ງໄປກວ່ານັ້ນ ແມ່ນຍັງສາມາດພິພາກສາຜູ້ຄົນ, ຫຼໍ່ຫຼອມຫົວໃຈຂອງພວກເຂົາ, ນຳຄວາມສຸກມາສູ່ພວກເຂົາ, ຮັບເອົາພວກເຂົາ, ເອົາຊະນະພວກເຂົາ ແລະ ເຮັດໃຫ້ພວກເຂົາສົມບູນ. ຈາກປະສົບການຂອງເຈົ້າ, ເຈົ້າຈະເຫັນວ່າ ພຣະເຈົ້າເປັນຕາຮັກຫຼາຍ. ແລ້ວປັດຈຸບັນນີ້ ເຈົ້າຮັກພຣະເຈົ້າຫຼາຍສໍ່າໃດ? ເຈົ້າສາມາດເວົ້າສິ່ງເຫຼົ່ານີ້ຈາກຫົວໃຈຂອງເຈົ້າຢ່າງແທ້ຈິງບໍ? ເມື່ອເຈົ້າສາມາດກ່າວຄຳເວົ້າເຫຼົ່ານີ້ອອກຈາກສ່ວນເລິກຂອງຫົວໃຈຂອງເຈົ້າ, ແລ້ວເຈົ້າກໍຈະສາມາດເປັນພະຍານໄດ້. ຫຼັງຈາກທີ່ປະສົບການຂອງເຈົ້າໄດ້ບັນລຸເຖິງລະດັບນີ້ ເຈົ້າກໍຈະສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້ ແລະ ເຈົ້າຈະມີຄຸນສົມບັດ. ຖ້າເຈົ້າບໍ່ໄປເຖິງລະດັບນີ້ໃນປະສົບການຂອງເຈົ້າ, ແລ້ວເຈົ້າກໍຍັງຈະຫ່າງໄກຫຼາຍ. ມັນເປັນເລື່ອງປົກກະຕິທີ່ຜູ້ຄົນຈະສະແດງຄວາມອ່ອນແອໃນລະຫວ່າງຂະບວນການຫຼໍ່ຫຼອມ, ແຕ່ຫຼັງຈາກການຫຼໍ່ຫຼອມ ເຈົ້າຄວນສາມາດເວົ້າໄດ້ວ່າ "ພຣະເຈົ້າມີສະຕິປັນຍາໃນພາລະກິດຂອງພຣະອົງ!" ຖ້າເຈົ້າສາມາດຍອມບັນລຸຄວາມເຂົ້າໃຈກ່ຽວກັບພຣະທຳເຫຼົ່ານີ້ຢ່າງແທ້ຈິງ, ແລ້ວມັນກໍຈະເປັນສິ່ງທີ່ເຈົ້າເຊີດຊູ ແລະ ປະສົບການຂອງເຈົ້າກໍຈະມີຄຸນຄ່າ.

ຕອນນີ້ ເຈົ້າຄວນສະແຫວງຫາຫຍັງ? ບໍ່ວ່າເຈົ້າຈະສາມາດເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າ ຫຼື ບໍ່, ບໍ່ວ່າເຈົ້າຈະສາມາດເປັນພະຍານ ແລະ ການສຳແດງອອກຂອງພຣະເຈົ້າ ຫຼື ບໍ່ ແລະບໍ່ວ່າເຈົ້າເໝາະສົມທີ່ຈະຖືກພຣະອົງໃຊ້ ຫຼື ບໍ່, ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຈົ້າຄວນສະແຫວງຫາ. ພຣະເຈົ້າໄດ້ກະທຳພາລະກິດຫຼາຍສໍ່າໃດແທ້ໃນຕົວເຈົ້າ? ເຈົ້າໄດ້ເຫັນຫຼາຍສໍ່າໃດ, ເຈົ້າໄດ້ສຳຜັດຫຼາຍສໍ່າໃດ? ເຈົ້າ

ໄດ້ຜະເຊີນ ແລະ ຊີມລົດຊາດຫຼາຍສໍ່າໃດ? ບໍ່ວ່າພຣະເຈົ້າໄດ້ທົດສອບເຈົ້າ, ຈັດການກັບເຈົ້າ ຫຼື ລົງວິໄນເຈົ້າ ຫຼື ບໍ່, ການກະທຳຂອງພຣະອົງ ແລະ ພາລະກິດຂອງພຣະອົງແມ່ນຖືກປະຕິບັດໃນຕົວເຈົ້າ, ແຕ່ໃນຖານະທີ່ເປັນຜູ້ເຊື່ອໃນພຣະເຈົ້າ ແລະ ເປັນຄົນທີ່ເຕັມໃຈສະແຫວງຫາເພື່ອຖືກພຣະອົງເຮັດໃຫ້ສົມບູນ, ເຈົ້າສາມາດເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າບົນພື້ນຖານປະສົບການຕົວຈິງຂອງເຈົ້າບໍ? ເຈົ້າສາມາດດຳລົງຊີວິດຕາມພຣະທຳຂອງພຣະເຈົ້າຜ່ານປະສົບການຕົວຈິງຂອງເຈົ້າບໍ? ເຈົ້າສາມາດສະໜອງໃຫ້ກັບຄົນອື່ນໆຜ່ານປະສົບການຕົວຈິງຂອງເຈົ້າເອງ ແລະ ເສຍສະຫຼະຊີວິດທັງໝົດຂອງເຈົ້າເພື່ອເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າໄດ້ບໍ? ເພື່ອເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າ, ເຈົ້າຕ້ອງເພິ່ງພາປະສົບການຂອງເຈົ້າ, ຄວາມຮູ້ ແລະ ລາຄາທີ່ເຈົ້າໄດ້ຈ່າຍ. ມີພຽງແຕ່ແບບນີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດປະຕິບັດຕາມຄວາມປະສົງຂອງພຣະອົງໄດ້. ເຈົ້າເປັນຄົນທີ່ເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າບໍ? ເຈົ້າມີຄວາມປາຖະໜານີ້ບໍ? ຖ້າເຈົ້າສາມາດເປັນພະຍານໃຫ້ແກ່ນາມຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ຄືໃຫ້ແກ່ພາລະກິດຂອງພຣະອົງ ແລະ ຖ້າເຈົ້າສາມາດດຳລົງຊີວິດຕາມລັກສະນະທີ່ພຣະອົງຮຽກຮ້ອງຈາກຄົນຂອງພຣະອົງ, ແລ້ວເຈົ້າກໍເປັນພະຍານໃຫ້ກັບພຣະເຈົ້າ. ເຈົ້າເປັນພະຍານໃຫ້ກັບພຣະເຈົ້າແນວໃດແທ້? ເຈົ້າເປັນພະຍານໂດຍການສະແຫວງຫາ ແລະ ການປາຖະໜາທີ່ຈະດຳລົງຊີວິດຕາມພຣະທຳຂອງພຣະເຈົ້າ, ການເປັນພະຍານຜ່ານຄຳເວົ້າຂອງເຈົ້າ, ການເຮັດໃຫ້ຜູ້ຄົນຮູ້ຈັກພາລະກິດຂອງພຣະອົງ ແລະ ເຫັນການກະທຳຂອງພຣະອົງ. ຖ້າເຈົ້າສະແຫວງຫາທຸກສິ່ງເຫຼົ່ານີ້ຢ່າງແທ້ຈິງ, ແລ້ວພຣະເຈົ້າກໍຈະເຮັດໃຫ້ເຈົ້າສົມບູນ. ຖ້າສິ່ງທີ່ເຈົ້າສະແຫວງຫາແມ່ນພຽງການຖືກພຣະເຈົ້າເຮັດໃຫ້ສົມບູນເທົ່ານັ້ນ ແລະ ໄດ້ຮັບພອນໃນທີ່ສຸດ, ແລ້ວທັດສະນະຂອງຄວາມເຊື່ອຂອງເຈົ້າໃນພຣະເຈົ້າກໍບໍ່ບໍລິສຸດ. ເຈົ້າຄວນສະແຫວງຫາວິທີທີ່ຈະເຫັນການກະທຳຂອງພຣະເຈົ້າໃນຊີວິດທີ່ເປັນຈິງ, ວິທີທີ່ຈະເຮັດໃຫ້ພຣະອົງພໍໃຈ ເມື່ອພຣະອົງເປີດເຜີຍຄວາມປະສົງຂອງພຣະອົງໃຫ້ກັບເຈົ້າ ແລະ ສະແຫວງຫາວິທີທີ່ຈະເປັນພະຍານເຖິງຄວາມມະຫັດສະຈັນ ແລະ ສະຕິປັນຍາຂອງພຣະອົງ ແລະ ວິທີທີ່ຈະເປັນພະຍານເຖິງວິທີທີ່ພຣະອົງລົງວິໄນ ແລະ ຈັດການກັບເຈົ້າ. ທຸກສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຈົ້າຄວນພະຍາຍາມໄຕ່ຕອງໃນຕອນນີ້. ຖ້າຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້າແມ່ນພຽງແຕ່ເພື່ອ ເຈົ້າຈະໄດ້ມີສ່ວນຮ່ວມໃນສະຫງ່າລາສີຂອງພຣະເຈົ້າ ຫຼັງຈາກທີ່ພຣະອົງເຮັດໃຫ້ເຈົ້າສົມບູນ, ແລ້ວມັນກໍຍັງບໍ່ພຽງພໍ ແລະ ບໍ່ສາມາດບັນລຸຕາມຄວາມຕ້ອງການຂອງພຣະເຈົ້າໄດ້. ເຈົ້າຕ້ອງສາມາດເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າ, ປະຕິບັດຕາມຄວາມຮຽກຮ້ອງຂອງພຣະອົງ ແລະ ມີປະສົບການກັບພາລະກິດທີ່ພຣະອົງໄດ້ປະຕິບັດໃນຜູ້ຄົນດ້ວຍວິທີທີ່ເປັນຈິງ. ບໍ່ວ່າມັນຈະເປັນຄວາມເຈັບປວດ, ນໍ້າຕາ ຫຼື ຄວາມໂສກເສົ້າ, ເຈົ້າກໍຕ້ອງຜະເຊີນກັບມັນທັງໝົດໃນການປະຕິບັດຂອງເຈົ້າ. ພວກມັນແມ່ນເພື່ອເຮັດໃຫ້ເຈົ້າສົມບູນດັ່ງຄົນໜຶ່ງທີ່ເປັນພະຍານໃຫ້ແກ່ພຣະເຈົ້າ. ແມ່ນຫຍັງກັນແທ້ທີ່ບັງຄັບໃຫ້ເຈົ້າທົນທຸກ ແລະ ສະແຫວງຫາຄວາມສົມບູນໃນຕອນນີ້? ການທົນທຸກໃນປັດຈຸບັນຂອງເຈົ້າແມ່ນເຫັນແກ່ການຮັກພຣະເຈົ້າ ແລະ ເປັນພະຍານໃຫ້ແກ່ພຣະອົງແທ້ໆບໍ? ຫຼື ມັນແມ່ນເຫັນແກ່ພອນຂອງເນື້ອໜັງ, ສຳລັບຄວາມຄາດຫວັງໃນອະນາຄົດ ແລະ ໂຊກຊະຕາຂອງເຈົ້າ?

ເຈດຕະນາທັງໝົດຂອງເຈົ້າ, ແຮງຈູງໃຈ ແລະ ເປົ້າໝາຍສ່ວນຕົວທີ່ເຈົ້າສະແຫວງຫາຕ້ອງຖືກແກ້ໄຂໃຫ້ຖືກຕ້ອງ ແລະ ບໍ່ສາມາດຖືກນໍາພາໂດຍຄວາມປະສົງຂອງເຈົ້າເອງ. ຖ້າຄົນໜຶ່ງສະແຫວງຫາຄວາມສົມບູນເພື່ອຮັບເອົາພອນ ແລະ ເພື່ອປົກຄອງດ້ວຍລິດອໍານາດ, ໃນຂະນະທີ່ຄົນອື່ນສະແຫວງຫາຄວາມສົມບູນເພື່ອເຮັດໃຫ້ພຣະເຈົ້າພໍໃຈ, ເພື່ອເປັນພະຍານເຖິງພາລະກິດຂອງພຣະເຈົ້າຢ່າງແທ້ຈິງ, ເຈົ້າຈະເລືອກການສະແຫວງຫາວິທີໃດຈາກສອງຢ່າງທີ່ກ່າວມາ? ຖ້າເຈົ້າເລືອກຢ່າງທໍາອິດ, ແລ້ວເຈົ້າກໍຍັງຫ່າງໄກຈາກມາດຕະຖານຂອງພຣະເຈົ້າຫຼາຍ. ເຮົາໄດ້ເວົ້າຄັ້ງໜຶ່ງກ່ອນໜ້ານີ້ແລ້ວວ່າ ການກະທໍາຂອງເຮົາເປັນທີ່ຮູ້ຈັກຢ່າງເປີດເຜີຍທົ່ວຈັກກະວານທັງປວງ ແລະ ເຮົາຈະປົກຄອງໃນຖານະກະສັດໃນຈັກກະວານ. ໃນອີກດ້ານໜຶ່ງ, ສິ່ງທີ່ພວກເຈົ້າໄດ້ຖືກຝາກຝັງໄວ້ແມ່ນການອອກໄປເປັນພະຍານໃຫ້ກັບພາລະກິດຂອງພຣະເຈົ້າ, ບໍ່ແມ່ນເປັນກະສັດ ແລະ ປາກົດຕົວຕໍ່ຈັກກະວານທັງປວງ. ໃຫ້ການກະທໍາຂອງພຣະເຈົ້າເຕັມໄປທົ່ວຈັກກະວານ ແລະ ທ້ອງຟ້າ. ໃຫ້ທຸກຄົນໄດ້ເຫັນເຖິງການກະທໍາເຫຼົ່ານັ້ນ ແລະ ຮັບຮູ້ພວກມັນ. ພຣະທໍາເຫຼົ່ານີ້ເວົ້າກ່ຽວກັບພຣະເຈົ້າເອງ ແລະ ສິ່ງທີ່ມະນຸດຄວນເຮັດກໍຄືເປັນພະຍານໃຫ້ກັບພຣະເຈົ້າ. ໃນຕອນນີ້, ເຈົ້າຮູ້ຈັກກ່ຽວກັບພຣະເຈົ້າຫຼາຍສໍ່າໃດ? ເຈົ້າສາມາດເປັນພະຍານໃຫ້ກັບພຣະເຈົ້າຫຼາຍສໍ່າໃດ? ແມ່ນຫຍັງຄືເປົ້າໝາຍຂອງການທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນ? ເມື່ອເຈົ້າເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ແລ້ວເຈົ້າຄວນພິຈາລະນາເຖິງຄວາມປະສົງຂອງພຣະອົງແນວໃດ? ຖ້າເຈົ້າເຕັມໃຈທີ່ຈະຖືກເຮັດໃຫ້ສົມບູນ ແລະ ເປັນພະຍານໃຫ້ແກ່ພາລະກິດຂອງພຣະເຈົ້າຜ່ານສິ່ງທີ່ເຈົ້າດໍາລົງຊີວິດຕາມ, ຖ້າເຈົ້າມີກໍາລັງຂັບເຄື່ອນນີ້, ແລ້ວບໍ່ມີສິ່ງໃດທີ່ຍາກເກີນໄປ. ສິ່ງທີ່ຜູ້ຄົນຕ້ອງການໃນຕອນນີ້ແມ່ນຄວາມເຊື່ອ. ຖ້າເຈົ້າມີກໍາລັງຂັບເຄື່ອນນີ້, ແລ້ວມັນກໍງ່າຍທີ່ຈະປະຖິ້ມຄວາມຄິດລົບ, ຄວາມບໍ່ດິ້ນລົນ, ຄວາມຂີ້ຄ້ານ ແລະ ແນວຄິດທາງເນື້ອໜັງ, ປັດຊະຍາສໍາລັບການດໍາລົງຊີວິດ, ອຸປະນິໄສທີ່ກະບົດ, ຄວາມຮູ້ສຶກ ແລະ ອື່ນໆ.

ໃນຂະນະທີ່ກໍາລັງປະສົບກັບການທົດລອງ, ມັນເປັນເລື່ອງປົກກະຕິທີ່ຜູ້ຄົນຈະອ່ອນແອ ຫຼື ມີຄວາມຄິດລົບຢູ່ພາຍໃນຕົວພວກເຂົາ ຫຼື ຂາດຄວາມຊັດເຈນກ່ຽວກັບຄວາມປະສົງຂອງພຣະເຈົ້າ ຫຼື ເສັ້ນທາງໃນການປະຕິບັດຂອງພວກເຂົາ. ແຕ່ໃນກໍລະນີໃດກໍຕາມ, ເຈົ້າຕ້ອງມີຄວາມເຊື່ອໃນພາລະກິດຂອງພຣະເຈົ້າ ແລະ ບໍ່ປະຕິເສດພຣະເຈົ້າ ຄືກັນກັບໂຢບ. ເຖິງແມ່ນວ່າ ໂຢບອ່ອນແອ ແລະ ໄດ້ສາບແຊ່ງມື້ເກີດຂອງເພິ່ນເອງ, ເພິ່ນກໍບໍ່ໄດ້ປະຕິເສດວ່າ ທຸກສິ່ງໃນຊີວິດຂອງມະນຸດແມ່ນຖືກປະທານໃຫ້ໂດຍພຣະເຢໂຮວາ ແລະ ພຣະເຢໂຮວາຍັງເປັນຜູ້ທີ່ນໍາທຸກສິ່ງໄປຈາກເພິ່ນ. ບໍ່ວ່າເພິ່ນຈະຖືກທົດສອບຢ່າງໃດກໍຕາມ, ເພິ່ນກໍຮັກສາຄວາມເຊື່ອນີ້. ໃນປະສົບການຂອງເຈົ້າ, ບໍ່ວ່າເຈົ້າປະສົບກັບການຫຼໍ່ຫຼອມແບບໃດກໍຕາມຜ່ານພຣະທໍາຂອງພຣະເຈົ້າ, ເວົ້າສັ້ນໆກໍຄືສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດຊາດແມ່ນຄວາມເຊື່ອຂອງພວກເຂົາ ແລະ ຄວາມຮັກຂອງພວກເຂົາສໍາລັບພຣະອົງ. ສິ່ງພຣະອົງໄດ້ເຮັດໃຫ້ສົມບູນໂດຍການປະຕິບັດພາລະກິດໃນລັກສະນະນີ້ແມ່ນຄວາມເຊື່ອ, ຄວາມຮັກ ແລະ ຄວາມປາຖະໜາຂອງຜູ້ຄົນ. ພຣະເຈົ້າປະຕິບັດພາລະກິດແຫ່ງຄວາມສົມບູນໃນຜູ້ຄົນ ແລະ ພວກເຂົາບໍ່ສາມາດເຫັນມັນໄດ້, ບໍ່ສາມາດສໍາຜັດມັນໄດ້; ພາຍໃນສະຖານະການດັ່ງກ່າວ, ຄວາມເຊື່ອຂອງເຈົ້າກໍ

ຈຳເປັນ. ຄວາມເຊື່ອຂອງຜູ້ຄົນຈຳເປັນຕ້ອງມີ ເມື່ອບາງສິ່ງບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ ແລະ ຄວາມເຊື່ອຂອງເຈົ້າຈຳເປັນຕ້ອງມີ ເມື່ອເຈົ້າບໍ່ສາມາດປະຖິ້ມແນວຄິດຂອງເຈົ້າເອງໄດ້. ເມື່ອເຈົ້າບໍ່ມີຄວາມຊັດເຈນກ່ຽວກັບພາລະກິດຂອງພຣະເຈົ້າ, ສິ່ງທີ່ຈຳເປັນສຳລັບເຈົ້າກໍຄືການມີຄວາມເຊື່ອ ແລະ ຍຶດໝັ້ນ ແລະ ຢືນເປັນພະຍານ. ເມື່ອໂຢບໄປເຖິງຈຸດນີ້, ພຣະເຈົ້າກໍປາກົດກັບເພິ່ນ ແລະ ກ່າວຕໍ່ເພິ່ນ. ນັ້ນກໍຄື ຈາກພາຍໃນຄວາມເຊື່ອຂອງເຈົ້າເທົ່ານັ້ນ ເຈົ້າຈຶ່ງສາມາດເຫັນພຣະເຈົ້າໄດ້ ແລະ ເມື່ອເຈົ້າມີຄວາມເຊື່ອ ພຣະເຈົ້າກໍຈະເຮັດໃຫ້ເຈົ້າສົມບູນ. ຫາກປາສະຈາກຄວາມເຊື່ອ, ພຣະອົງບໍ່ສາມາດເຮັດສິ່ງນີ້ໄດ້. ພຣະເຈົ້າຈະປະທານສິ່ງໃດກໍຕາມທີ່ເຈົ້າຫວັງຈະໄດ້ຮັບໃຫ້ກັບເຈົ້າ. ຖ້າເຈົ້າບໍ່ມີຄວາມເຊື່ອ, ເຈົ້າກໍບໍ່ສາມາດຖືກເຮັດໃຫ້ສົມບູນ ແລະ ເຈົ້າຈະບໍ່ສາມາດເຫັນການກະທຳຂອງພຣະເຈົ້າໄດ້, ແຮງໄກທີ່ຈະໄດ້ເຫັນອຳນາດອັນຍິ່ງໃຫຍ່ຂອງພຣະອົງ. ເມື່ອເຈົ້າມີຄວາມເຊື່ອວ່າເຈົ້າຈະເຫັນການກະທຳຂອງພຣະອົງໃນປະສົບການຕົວຈິງຂອງເຈົ້າ, ແລ້ວພຣະເຈົ້າຈະປາກົດຕໍ່ເຈົ້າ ແລະ ພຣະອົງຈະໃຫ້ຄວາມສະຫວ່າງ ແລະ ນຳພາເຈົ້າຈາກພາຍໃນ. ຫາກປາສະຈາກຄວາມເຊື່ອນັ້ນ, ພຣະເຈົ້າຈະບໍ່ສາມາດເຮັດສິ່ງນັ້ນໄດ້. ຖ້າເຈົ້າສູນເສຍຄວາມຫວັງໃນພຣະເຈົ້າ, ເຈົ້າຈະສາມາດມີປະສົບການກັບພາລະກິດຂອງພຣະອົງໄດ້ແນວໃດ? ສະນັ້ນ, ມີແຕ່ເມື່ອເຈົ້າມີຄວາມເຊື່ອ ແລະ ເຈົ້າບໍ່ມີຄວາມສົງໄສຕໍ່ພຣະເຈົ້າເທົ່ານັ້ນ, ມີແຕ່ເມື່ອເຈົ້າມີຄວາມເຊື່ອທີ່ແທ້ຈິງໃນພຣະອົງເທົ່ານັ້ນ ບໍ່ວ່າພຣະອົງຈະກະທຳສິ່ງໃດກໍຕາມ, ພຣະອົງຈຶ່ງຈະໃຫ້ແສງສະຫວ່າງ ແລະ ແສງເຍືອງທາງໃຫ້ແກ່ເຈົ້າຜ່ານປະສົບການຂອງເຈົ້າ ແລະ ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະສາມາດເຫັນການກະທຳຂອງພຣະອົງ. ສິ່ງເຫຼົ່ານີ້ແມ່ນລ້ວນແລ້ວແຕ່ຖືກບັນລຸຜ່ານຄວາມເຊື່ອ. ຄວາມເຊື່ອມາຜ່ານການຫຼໍ່ຫຼອມເທົ່ານັ້ນ ແລະ ຫາກບໍ່ມີການຫຼໍ່ຫຼອມ ຄວາມເຊື່ອບໍ່ສາມາດພັດທະນາໄດ້. ຄຳນີ້ "ຄວາມເຊື່ອ" ໝາຍເຖິງຫຍັງ? ຄວາມເຊື່ອແມ່ນຄວາມເຊື່ອທີ່ແທ້ຈິງ ແລະ ຫົວໃຈທີ່ຈິງໃຈທີ່ມະນຸດຄວນມີ ເມື່ອພວກເຂົາບໍ່ສາມາດເຫັນ ຫຼື ສຳຜັດບາງສິ່ງບາງຢ່າງ, ເມື່ອພາລະກິດຂອງພຣະເຈົ້າບໍ່ສອດຄ່ອງກັບແນວຄິດຂອງມະນຸດ, ເມື່ອພາລະກິດນັ້ນຢູ່ນອກເໜືອການຢັ່ງເຖິງຂອງມະນຸດ. ນີ້ແມ່ນຄວາມເຊື່ອທີ່ເຮົາເວົ້າເຖິງ. ຜູ້ຄົນຕ້ອງການຄວາມເຊື່ອໃນເວລາແຫ່ງຄວາມລຳບາກ ແລະ ການຫຼໍ່ຫຼອມ ແລະ ຄວາມເຊື່ອແມ່ນສິ່ງທີ່ຕາມມາດ້ວຍການຫຼໍ່ຫຼອມ; ການຫຼໍ່ຫຼອມ ແລະ ຄວາມເຊື່ອແມ່ນບໍ່ສາມາດແຍກອອກຈາກກັນໄດ້. ບໍ່ວ່າພຣະເຈົ້າຈະປະຕິບັດພາລະກິດແນວໃດກໍຕາມ ແລະ ບໍ່ວ່າເຈົ້າຢູ່ໃນສະພາບແວດລ້ອມແບບໃດກໍຕາມ, ເຈົ້າສາມາດສະແຫວງຫາຊີວິດ ແລະ ສະແຫວງຫາຄວາມຈິງ ແລະ ສະແຫວງຫາຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ ແລະ ມີຄວາມເຂົ້າໃຈກ່ຽວກັບການກະທຳຂອງພຣະອົງ ແລະ ເຈົ້າສາມາດປະຕິບັດຕາມຄວາມຈິງ. ການເຮັດແບບນັ້ນຄືການມີຄວາມເຊື່ອທີ່ແທ້ຈິງ ແລະ ການເຮັດແບບນັ້ນສະແດງໃຫ້ເຫັນວ່າ ເຈົ້າບໍ່ໄດ້ສູນເສຍຄວາມເຊື່ອໃນພຣະເຈົ້າ. ເຈົ້າພຽງແຕ່ສາມາດມີຄວາມເຊື່ອທີ່ແທ້ຈິງໃນພຣະເຈົ້າໄດ້ ຖ້າເຈົ້າສາມາດຍັງຄົງສະແຫວງຫາຄວາມຈິງຜ່ານການຫຼໍ່ຫຼອມ, ຖ້າເຈົ້າສາມາດຮັກພຣະເຈົ້າໄດ້ຢ່າງແທ້ຈິງ ແລະ ບໍ່ມີຄວາມສົງໄສກ່ຽວກັບພຣະອົງ, ຖ້າບໍ່ວ່າພຣະອົງຈະກະທຳສິ່ງໃດກໍຕາມ ເຈົ້າຍັງປະຕິບັດຄວາມຈິງເພື່ອເຮັດໃຫ້ພຣະອົງພໍໃຈ ແລະ ຖ້າເຈົ້າສາມາດສະແຫວງຫາຄວາມປະສົງຂອງພຣະອົງຢ່າງເລິກເຊິ່ງ ແລະ

ຄຳນຶງເຖິງຄວາມປະສົງຂອງພຣະອົງ. ໃນອະດີດ ເມື່ອພຣະເຈົ້າເວົ້າວ່າ ເຈົ້າຈະປົກຄອງເໜືອນດັ່ງກະສັດ, ເຈົ້າຮັກພຣະອົງ ແລະ ເມື່ອພຣະອົງສຳແດງຕົວພຣະອົງເອງໃຫ້ກັບເຈົ້າຢ່າງເປີດເຜີຍ, ເຈົ້າກໍສະແຫວງຫາພຣະອົງ. ແຕ່ບັດນີ້ ພຣະເຈົ້າໄດ້ລີ້ລັບ, ເຈົ້າບໍ່ສາມາດເຫັນພຣະອົງໄດ້ ແລະ ບັນຫາກໍໄດ້ມາຫາເຈົ້າ, ແລ້ວເຈົ້າບໍ່ໄດ້ສູນເສຍຄວາມຫວັງໃນພຣະເຈົ້າບໍ? ສະນັ້ນ ເຈົ້າຕ້ອງສະແຫວງຊີວິດ ແລະ ສະແຫວງຫາເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າຢູ່ຕະຫຼອດເວລາ. ສິ່ງນີ້ຈຶ່ງເອີ້ນວ່າ ຄວາມເຊື່ອທີ່ແທ້ຈິງ ແລະ ສິ່ງນີ້ຈຶ່ງເປັນຮູບແບບຂອງຄວາມຮັກທີ່ແທ້ຈິງ ແລະ ສວຍງາມທີ່ສຸດ.

ໃນອະດີດ, ທຸກຄົນຈະມາຢູ່ຕໍ່ໜ້າພຣະເຈົ້າເພື່ອ ຕັ້ງຄຳໝັ້ນສັນຍາຂອງພວກເຂົາ ແລະ ພວກເຂົາຈະເວົ້າວ່າ “ເຖິງແມ່ນວ່າຈະບໍ່ມີຜູ້ໃດຮັກພຣະເຈົ້າ, ຂ້ານ້ອຍຕ້ອງຮັກພຣະອົງ”. ແຕ່ຕອນນີ້, ການຫຼໍ່ຫຼອມໄດ້ມາຫາເຈົ້າ ແລະ ຍ້ອນສິ່ງນີ້ບໍ່ສອດຄ່ອງກັບແນວຄິດຂອງເຈົ້າ, ເຈົ້າກໍສູນເສຍຄວາມເຊື່ອໃນພຣະເຈົ້າ. ສິ່ງນີ້ແມ່ນຄວາມຮັກທີ່ແທ້ຈິງບໍ? ເຈົ້າໄດ້ອ່ານຫຼາຍຄັ້ງກ່ຽວກັບການກະທຳຂອງໂຢບ, ເຈົ້າລືມກ່ຽວກັບສິ່ງເຫຼົ່ານັ້ນແລ້ວບໍ? ຄວາມຮັກທີ່ແທ້ຈິງເທົ່ານັ້ນທີ່ສາມາດເປັນຮູບຮ່າງຈາກພາຍໃນຄວາມເຊື່ອໄດ້. ເຈົ້າພັດທະນາຄວາມຮັກທີ່ແທ້ຈິງໃຫ້ກັບພຣະເຈົ້າຜ່ານການຫຼໍ່ຫຼອມທີ່ເຈົ້າໄດ້ຜ່ານ ແລະ ມັນແມ່ນຜ່ານຄວາມເຊື່ອຂອງເຈົ້າ ເຈົ້າຈຶ່ງສາມາດຄຳນຶງເຖິງຄວາມປະສົງຂອງພຣະເຈົ້າໃນປະສົບການຕົວຈິງຂອງເຈົ້າ ແລະ ມັນຍັງຜ່ານຄວາມເຊື່ອ ເຈົ້າຈຶ່ງປະຖິ້ມເນື້ອໜັງຂອງເຈົ້າເອງ ແລະ ສະແຫວງຫາຊີວິດ; ນີ້ແມ່ນສິ່ງທີ່ຜູ້ຄົນຄວນເຮັດ. ຖ້າເຈົ້າເຮັດສິ່ງນີ້ ແລ້ວເຈົ້າກໍຈະສາມາດເຫັນການກະທຳຂອງພຣະເຈົ້າ, ແຕ່ຖ້າເຈົ້າຂາດຄວາມເຊື່ອ ແລ້ວເຈົ້າກໍຈະບໍ່ສາມາດເຫັນການກະທຳຂອງພຣະເຈົ້າ ຫຼື ມີປະສົບການກັບພາລະກິດຂອງພຣະອົງ. ຖ້າເຈົ້າຕ້ອງການຖືກໃຊ້ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນ, ແລ້ວເຈົ້າຕ້ອງມີທຸກຢ່າງ: ຄວາມຕັ້ງໃຈໃນການທົນທຸກ, ຄວາມເຊື່ອ, ຄວາມອົດທົນ, ຄວາມເຊື່ອຟັງ ແລະ ຄວາມສາມາດທີ່ຈະມີປະສົບການກັບພາລະກິດຂອງພຣະເຈົ້າ, ຄວາມເຂົ້າໃຈໃນຄວາມປະສົງຂອງພຣະອົງ, ຄວາມຄຳນຶງເຖິງຄວາມໂສກເສົ້າຂອງພຣະອົງ ແລະ ອື່ນໆອີກ. ການເຮັດໃຫ້ຄົນໜຶ່ງສົມບູນບໍ່ແມ່ນເລື່ອງງ່າຍ ແລະ ທຸກການຫຼໍ່ຫຼອມທີ່ເຈົ້າຜະເຊີນຈຳເປັນຕ້ອງມີຄວາມເຊື່ອ ແລະ ຄວາມຮັກຂອງເຈົ້າ. ຖ້າເຈົ້າຕ້ອງການທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ, ມັນບໍ່ພຽງພໍທີ່ຈະອອກໄປຄົ້ນຫາຕາມທ້ອງຖະໜົນເທົ່ານັ້ນ ຫຼື ມັນບໍ່ພຽງພໍທີ່ເສຍສະຫຼະຕົວເຈົ້າເອງໃຫ້ກັບພຣະເຈົ້າ. ເຈົ້າຕ້ອງປະກອບມີຫຼາຍສິ່ງເພື່ອທີ່ຈະສາມາດກາຍມາເປັນຄົນທີ່ພຣະເຈົ້າເຮັດໃຫ້ສົມບູນໄດ້. ເມື່ອເຈົ້າພົບກັບການທົນທຸກ ເຈົ້າຕ້ອງສາມາດປະຖິ້ມຄວາມກັງວົນຫາເນື້ອໜັງ ແລະ ບໍ່ຕໍ່ວ່າພຣະເຈົ້າ. ເມື່ອພຣະເຈົ້າເຊື່ອງພຣະອົງເອງຈາກເຈົ້າ, ເຈົ້າຕ້ອງສາມາດມີຄວາມເຊື່ອທີ່ຈະຕິດຕາມພຣະອົງ, ຮັກສາຄວາມຮັກທີ່ຜ່ານມາຂອງເຈົ້າ ໂດຍບໍ່ເຮັດໃຫ້ຄວາມຮັກນັ້ນສະດຸດ ຫຼື ຫາຍໄປ. ບໍ່ວ່າພຣະເຈົ້າຈະກະທຳຫຍັງກໍຕາມ, ເຈົ້າຕ້ອງຍອມຢູ່ພາຍໃຕ້ແບບແຜນຂອງພຣະອົງ ແລະ ກຽມພ້ອມທີ່ຈະສາບແຊ່ງເນື້ອໜັງຂອງເຈົ້າເອງ ແທນທີ່ຈະຕໍ່ວ່າພຣະອົງ. ເມື່ອເຈົ້າຜະເຊີນກັບການທົດລອງ ເຈົ້າຕ້ອງເຮັດໃຫ້ພຣະເຈົ້າພໍໃຈ ເຖິງແມ່ນວ່າເຈົ້າອາດຮ້ອງໄຫ້ຢ່າງຂົມຂື່ນ ຫຼື ຮູ້ສຶກລັງເລທີ່ຈະຈາກບາງສິ່ງທີ່ຮັກ. ສິ່ງນີ້ເທົ່ານັ້ນຈຶ່ງຈະເອີ້ນວ່າ ຄວາມຮັກ ແລະ ຄວາມເຊື່ອທີ່ແທ້ຈິງ. ບໍ່ວ່າວຸດທິພາວະຕົວຈິງຂອງເຈົ້າຈະແມ່ນ

ຫຍັງກໍຕາມ, ເຈົ້າຕ້ອງມີຄວາມຕັ້ງໃຈທີ່ຈະທົນທຸກກັບຄວາມລຳບາກນີ້ກ່ອນ ແລະ ຄວາມເຊື່ອທີ່ແທ້ຈິງ ແລະ ເຈົ້າຕ້ອງມີຄວາມຕັ້ງໃຈທີ່ຈະປະຖິ້ມເນື້ອໜັງ. ເຈົ້າຄວນເຕັມໃຈທີ່ຈະອົດທົນຕໍ່ຄວາມຍາກລຳບາກສ່ວນຕົວ ແລະ ທົນທຸກຕໍ່ການສູນເສຍຜົນປະໂຫຍດສ່ວນຕົວຂອງເຈົ້າ ເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ເຈົ້າຍັງຕ້ອງສາມາດຮູ້ສຶກສຳນຶກຜິດກ່ຽວກັບຕົນເອງໃນຫົວໃຈຂອງເຈົ້າ: ໃນອະດີດ, ເຈົ້າບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈ ແລະ ຕອນນີ້ ເຈົ້າສາມາດສຳນຶກຜິດຕົນເອງ. ເຈົ້າຕ້ອງບໍ່ຂາດໃນສິ່ງໃດໜຶ່ງ, ມັນແມ່ນຜ່ານສິ່ງເຫຼົ່ານີ້ ພຣະເຈົ້າຈຶ່ງຈະເຮັດໃຫ້ເຈົ້າສົມບູນ. ຖ້າເຈົ້າບໍ່ສາມາດບັນລຸເງື່ອນໄຂເຫຼົ່ານີ້, ແລ້ວເຈົ້າກໍບໍ່ສາມາດຖືກເຮັດໃຫ້ສົມບູນໄດ້.

ຄົນທີ່ຮັບໃຊ້ພຣະເຈົ້າບໍ່ຄວນແຕ່ຮູ້ຈັກວິທີທົນທຸກເພື່ອພຣະອົງເທົ່ານັ້ນ; ຍິ່ງໄປກວ່ານັ້ນ ພວກເຂົາຄວນເຂົ້າໃຈວ່າ ເປົ້າໝາຍຂອງການເຊື່ອໃນພຣະເຈົ້າແມ່ນການສະແຫວງຫາຄວາມຮັກພຣະເຈົ້າ. ພຣະເຈົ້າໃຊ້ເຈົ້າບໍ່ແມ່ນພຽງແຕ່ເພື່ອຫຼໍ່ຫຼອມເຈົ້າ ຫຼື ເຫັນແກ່ການເຮັດໃຫ້ເຈົ້າທົນທຸກເທົ່ານັ້ນ, ແຕ່ກົງກັນຂ້າມ ພຣະອົງໃຊ້ເຈົ້າ ເພື່ອວ່າເຈົ້າອາດຮູ້ຈັກການກະທຳຂອງພຣະອົງ, ຮູ້ຈັກຄວາມໝາຍທີ່ແທ້ຈິງຂອງຊີວິດມະນຸດ ແລະ ໂດຍສະເພາະແລ້ວ ເພື່ອວ່າເຈົ້າອາດຮູ້ຈັກວ່າ ການຮັບໃຊ້ພຣະເຈົ້າບໍ່ແມ່ນວຽກງານທີ່ງ່າຍ. ການມີປະສົບການກັບພາລະກິດຂອງພຣະເຈົ້າບໍ່ແມ່ນກ່ຽວກັບການໄດ້ຮັບຄວາມເມດຕາ, ແຕ່ກົງກັນຂ້າມແມ່ນການທົນທຸກຍ້ອນຄວາມຮັກທີ່ເຈົ້າມີຕໍ່ພຣະອົງ. ຍ້ອນເຈົ້າໄດ້ຮັບຄວາມເມດຕາຂອງພຣະເຈົ້າ, ເຈົ້າຍັງຕ້ອງໄດ້ຮັບການຂ້ຽນຕີຂອງພຣະອົງ; ເຈົ້າຕ້ອງຜະເຊີນກັບທຸກສິ່ງເຫຼົ່ານີ້. ເຈົ້າສາມາດຜະເຊີນກັບແສງສະຫວ່າງຂອງພຣະເຈົ້າທີ່ຢູ່ໃນຕົວເຈົ້າ ແລະ ເຈົ້າຍັງສາມາດຜະເຊີນກັບວິທີການທີ່ພຣະອົງຈັດການກັບເຈົ້າ ແລະ ພິພາກສາເຈົ້າ. ໃນລັກສະນະນີ້, ປະສົບການຂອງເຈົ້າຈະຄອບຄຸມ. ພຣະເຈົ້າໄດ້ປະຕິບັດພາລະກິດແຫ່ງການພິພາກສາ ແລະ ການຂ້ຽນຕີໃນຕົວເຈົ້າ. ພຣະທຳຂອງພຣະເຈົ້າໄດ້ຈັດການກັບເຈົ້າ, ບໍ່ພຽງແຕ່ສໍ່ານັ້ນ; ມັນຍັງໄດ້ໃຫ້ແສງສະຫວ່າງ ແລະ ເຍືອງທາງໃຫ້ແກ່ເຈົ້າ. ເມື່ອເຈົ້າຄິດລົບ ແລະ ອ່ອນແອ, ພຣະເຈົ້າກັງວົນກ່ຽວກັບເຈົ້າ. ທັງໝົດຂອງພາລະກິດນີ້ແມ່ນເພື່ອເຮັດໃຫ້ເຈົ້າຮູ້ວ່າ ທຸກສິ່ງກ່ຽວກັບມະນຸດແມ່ນຢູ່ພາຍໃຕ້ການປັ້ນແຕ່ງຂອງພຣະເຈົ້າ. ເຈົ້າອາດຈະຄິດວ່າ ການເຊື່ອໃນພຣະເຈົ້າແມ່ນກ່ຽວກັບການທົນທຸກ ຫຼື ການເຮັດທຸກສິ່ງສຳລັບພຣະອົງ; ເຈົ້າອາດຄິດວ່າ ເປົ້າໝາຍຂອງການເຊື່ອໃນພຣະເຈົ້າກໍແມ່ນເພື່ອວ່າເນື້ອໜັງຂອງເຈົ້າອາດຈະສະຫງົບສຸກ ຫຼື ໃຫ້ທຸກສິ່ງໃນຊີວິດຂອງເຈົ້າເປັນໄປດ້ວຍດີ ຫຼື ເພື່ອວ່າເຈົ້າອາດສະດວກສະບາຍ ແລະ ສະບາຍໃຈກັບທຸກສິ່ງ. ເຖິງຢ່າງໃດກໍຕາມ ບໍ່ມີຫຍັງເລີຍໃນສິ່ງເຫຼົ່ານີ້ທີ່ເປັນເປົ້າໝາຍທີ່ຜູ້ຄົນຄວນຍຶດໃນຄວາມເຊື່ອຂອງພວກເຂົາໃນພຣະເຈົ້າ. ຖ້າເຈົ້າເຊື່ອຍ້ອນເປົ້າໝາຍເຫຼົ່ານີ້, ແລ້ວທັດສະນະຂອງເຈົ້າກໍບໍ່ຖືກຕ້ອງ ແລະ ມັນເປັນໄປບໍ່ໄດ້ແທ້ໆທີ່ເຈົ້າຈະບໍ່ຖືກເຮັດໃຫ້ສົມບູນ. ການກະທຳຂອງພຣະເຈົ້າ, ອຸປະນິໄສທີ່ຊອບທຳຂອງພຣະເຈົ້າ, ສະຕິປັນຍາຂອງພຣະອົງ, ພຣະທຳຂອງພຣະອົງ ແລະ ຄວາມມະຫັດສະຈັນ ແລະ ຄວາມບໍ່ສາມາດຢັ່ງເຖິງໄດ້ຂອງພຣະອົງແມ່ນທຸກສິ່ງທີ່ຜູ້ຄົນຄວນເຂົ້າໃຈ. ການມີຄວາມເຂົ້າໃຈແບບນີ້, ເຈົ້າຄວນໃຊ້ມັນເພື່ອກຳຈັດຄວາມຮຽກຮ້ອງ, ຄວາມຫວັງ ແລະ ແນວຄິດສ່ວນຕົວທຸກຢ່າງທີ່ຢູ່ໃນຫົວໃຈຂອງເຈົ້າອອກໄປ. ໂດຍການກຳຈັດສິ່ງເຫຼົ່ານີ້ເທົ່ານັ້ນ ເຈົ້າຈຶ່ງສາມາດ

ບັນລຸເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງ ແລະ ໂດຍການເຮັດແບບນີ້ເທົ່ານັ້ນ ເຈົ້າຈຶ່ງສາມາດມີຊີວິດ ແລະ ເຮັດໃຫ້ພຣະເຈົ້າພໍໃຈໄດ້. ເປົ້າໝາຍຂອງການເຊື່ອໃນພຣະເຈົ້າແມ່ນເພື່ອໃຫ້ພຣະອົງພໍໃຈ ແລະ ດຳລົງຊີວິດຕາມອຸປະນິໄສທີ່ພຣະອົງຮຽກຮ້ອງ, ເພື່ອວ່າການກະທຳ ແລະ ສະຫງ່າລາສີຂອງພຣະອົງອາດຖືກສະແດງອອກຜ່ານກຸ່ມຄົນທີ່ບໍ່ເໝາະສົມນີ້. ນັ້ນຄືທັດສະນະທີ່ຖືກຕ້ອງສຳລັບການເຊື່ອໃນພຣະເຈົ້າ ແລະ ນີ້ຍັງເປັນເປົ້າໝາຍທີ່ເຈົ້າຄວນສະແຫວງຫາ. ເຈົ້າຄວນມີມຸມມອງທີ່ຖືກຕ້ອງກ່ຽວກັບການເຊື່ອໃນພຣະເຈົ້າ ແລະ ເຈົ້າຄວນສະແຫວງຫາເພື່ອຮັບເອົາພຣະທຳຂອງພຣະເຈົ້າ. ເຈົ້າຈຳເປັນຕ້ອງກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ເຈົ້າຕ້ອງສາມາດດຳລົງຊີວິດຕາມຄວາມຈິງ ແລະ ໂດຍສະເພາະແລ້ວ ເຈົ້າຕ້ອງສາມາດເຫັນການກະທຳຕົວຈິງຂອງພຣະອົງ, ການກະທຳທີ່ມະຫັດສະຈັນຂອງພຣະອົງທົ່ວຈັກກະວານທັງປວງ ພ້ອມທັງພາລະກິດຕົວຈິງທີ່ພຣະອົງປະຕິບັດໃນເນື້ອໜັງ. ຜ່ານທາງປະສົບການຕົວຈິງຂອງພວກເຂົາ, ຜູ້ຄົນສາມາດຮູ້ເຖິງຄຸນຄ່າວ່າ ພຣະເຈົ້າປະຕິບັດພາລະກິດຂອງພຣະອົງໃນພວກເຂົາໄດ້ແນວໃດ ແລະ ແມ່ນຫຍັງຄືຄວາມປະສົງຂອງພຣະອົງທີ່ມີຕໍ່ພວກເຂົາ. ເປົ້າໝາຍຂອງທຸກສິ່ງເຫຼົ່ານີ້ແມ່ນເພື່ອກຳຈັດອຸປະນິໄສທີ່ເສື່ອມຊາມແບບຊາຕານຂອງຜູ້ຄົນ. ການປະຖິ້ມສິ່ງທີ່ບໍ່ສະອາດ ແລະ ຄວາມບໍ່ຊອບທຳທັງໝົດທີ່ຢູ່ໃນຕົວເຈົ້າ ແລະ ການປະຖິ້ມເຈດຕະນາທີ່ຜິດຂອງເຈົ້າ ແລະ ການພັດທະນາຄວາມເຊື່ອທີ່ແທ້ຈິງໃນພຣະເຈົ້າ, ດ້ວຍຄວາມເຊື່ອທີ່ແທ້ຈິງເທົ່ານັ້ນ ເຈົ້າຈຶ່ງຮັກພຣະເຈົ້າຢ່າງແທ້ຈິງໄດ້. ເຈົ້າສາມາດຮັກພຣະເຈົ້າຢ່າງແທ້ຈິງບົນພື້ນຖານຂອງຄວາມເຊື່ອທີ່ເຈົ້າມີໃນພຣະອົງເທົ່ານັ້ນ. ເຈົ້າສາມາດບັນລຸການຮັກພຣະເຈົ້າ ໂດຍບໍ່ເຊື່ອໃນພຣະອົງໄດ້ບໍ? ຍ້ອນເຈົ້າເຊື່ອໃນພຣະເຈົ້າ, ເຈົ້າບໍ່ສາມາດສັບສົນກ່ຽວກັບສິ່ງນັ້ນ. ບາງຄົນເຕັມໄປດ້ວຍຄວາມຫ້າວຫັນທັນທີທີ່ພວກເຂົາເຫັນວ່າຄວາມເຊື່ອໃນພຣະເຈົ້າຈະນຳເອົາພອນມາສູ່ພວກເຂົາ, ແຕ່ແລ້ວກໍສູນເສຍກຳລັງທັນທີທີ່ພວກເຂົາຕ້ອງທົນທຸກໃນການຫຼໍ່ຫຼອມ. ນັ້ນແມ່ນການເຊື່ອໃນພຣະເຈົ້າບໍ? ໃນທີ່ສຸດແລ້ວ, ເຈົ້າຕ້ອງບັນລຸການເຊື່ອຟັງຢ່າງຄົບຖ້ວນ ແລະ ເດັດຂາດຕໍ່ໜ້າພຣະເຈົ້າໃນຄວາມເຊື່ອຂອງເຈົ້າ. ເຈົ້າເຊື່ອໃນພຣະເຈົ້າແຕ່ຕ້ອງຍັງຮຽກຮ້ອງຈາກພຣະອົງ, ມີແນວຄິດຫຼາຍຢ່າງກ່ຽວກັບສາສະໜາທີ່ເຈົ້າບໍ່ສາມາດປະຖິ້ມໄດ້ ແລະ ເຈົ້າຍັງສະແຫວງຫາພອນທາງເນື້ອໜັງ ແລະ ຕ້ອງການໃຫ້ພຣະເຈົ້າຊ່ວຍເຫຼືອເນື້ອໜັງຂອງເຈົ້າ, ຊ່ວຍວິນຍານຂອງເຈົ້າໃຫ້ລອດພົ້ນ, ທຸກສິ່ງເຫຼົ່ານີ້ແມ່ນພຶດຕິກຳຂອງຜູ້ຄົນທີ່ມີທັດສະນະທີ່ຜິດ. ເຖິງແມ່ນວ່າ ຜູ້ຄົນທີ່ມີຄວາມເຊື່ອທາງສາສະໜາ ມີຄວາມເຊື່ອໃນພຣະເຈົ້າ, ພວກເຂົາກໍບໍ່ໄດ້ສະແຫວງຫາການປ່ຽນແປງດ້ານອຸປະນິໄສ ແລະ ບໍ່ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ, ແຕ່ກົງກັນຂ້າມຄືສະແຫວງຫາ ຜົນປະໂຫຍດທາງເນື້ອໜັງຂອງພວກເຂົາເທົ່ານັ້ນ. ຫຼາຍຄົນທີ່ຢູ່ທ່າມກາງພວກເຈົ້າມີຄວາມເຊື່ອທີ່ຈັດຢູ່ໃນປະເພດຄວາມເຊື່ອທາງສາສະໜາ; ນີ້ບໍ່ແມ່ນຄວາມເຊື່ອທີ່ແທ້ຈິງໃນພຣະເຈົ້າ. ເພື່ອທີ່ຈະເຊື່ອໃນພຣະເຈົ້າ, ຜູ້ຄົນຕ້ອງມີຫົວໃຈທີ່ກຽມພ້ອມທົນທຸກເພື່ອພຣະອົງ ແລະ ຄວາມຕັ້ງໃຈທີ່ຈະຖວາຍຕົນເອງ. ນອກຈາກຜູ້ຄົນຈະບັນລຸເງື່ອນໄຂສອງຢ່າງນີ້, ຄວາມເຊື່ອຂອງພວກເຂົາໃນພຣະເຈົ້າແມ່ນບໍ່ຖືກຕ້ອງ ແລະ ພວກເຂົາຈະບໍ່ສາມາດບັນລຸການປ່ຽນແປງດ້ານອຸປະນິໄສໄດ້. ມີແຕ່ຄົນທີ່ສະແຫວງຫາຄວາມຈິງໂດຍແທ້, ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ ແລະ

ສະແຫວງຫາຊີວິດເທົ່ານັ້ນ ຈຶ່ງເປັນຄົນທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ.

ເມື່ອການທົດລອງມາເຖິງເຈົ້າ, ເຈົ້າຈະນຳໃຊ້ພາລະກິດຂອງພຣະເຈົ້າເພື່ອຈັດການໆທົດລອງເຫຼົ່ານັ້ນແນວໃດ? ເຈົ້າຈະມີຄວາມຄິດລົບ ຫຼື ເຈົ້າຈະເຂົ້າໃຈການທົດລອງ ແລະ ການຫຼໍ່ຫຼອມຂອງພຣະເຈົ້າຈາກລັກສະນະທີ່ເປັນບວກໄດ້ບໍ? ເຈົ້າຈະໄດ້ຮັບຫຍັງຜ່ານການທົດລອງ ແລະ ການຫຼໍ່ຫຼອມຂອງພຣະເຈົ້າ? ຄວາມຮັກທີ່ເຈົ້າມີໃຫ້ພຣະເຈົ້າຈະເຕີບໃຫຍ່ບໍ? ເມື່ອເຈົ້າຕົກຢູ່ໃນການຫຼໍ່ຫຼອມ, ເຈົ້າຈະສາມາດນຳໃຊ້ການທົດລອງຂອງໂຢບ ແລະ ມີສ່ວນຮ່ວມຢ່າງກະຕືລືລົ້ນກັບພາລະກິດທີ່ພຣະເຈົ້າປະຕິບັດໃນເຈົ້າບໍ? ເຈົ້າຈະສາມາດເຫັນວິທີທີ່ພຣະເຈົ້າທົດສອບມະນຸດຜ່ານການທົດລອງຂອງໂຢບບໍ? ການທົດລອງຂອງໂຢບຈະນຳແຮງບັນດານໃຈແບບໃດມາສູ່ເຈົ້າ? ເຈົ້າເຕັມໃຈທີ່ຈະຢືນເປັນພະຍານໃຫ້ກັບພຣະເຈົ້າໃນລະຫວ່າງການຫຼໍ່ຫຼອມຂອງເຈົ້າບໍ ຫຼື ເຈົ້າຕ້ອງການທີ່ຈະເຮັດໃຫ້ເນື້ອໜັງພໍໃຈໃນສະພາບແວດລ້ອມທີ່ສຸກສະບາຍບໍ? ແມ່ນຫຍັງຄືທັດສະນະທີ່ແທ້ຈິງຂອງເຈົ້າຕໍ່ຄວາມເຊື່ອໃນພຣະເຈົ້າ? ມັນແມ່ນສຳລັບພຣະອົງແທ້ໆ ແລະ ບໍ່ແມ່ນສຳລັບເນື້ອໜັງບໍ? ເຈົ້າມີເປົ້າໝາຍທີ່ເຈົ້າຊອກຫາໃນການສະແຫວງຫາຂອງເຈົ້າແທ້ໆບໍ? ເຈົ້າເຕັມໃຈທີ່ຈະປະສົບກັບການຫຼໍ່ຫຼອມ ເພື່ອເຈົ້າອາດຖືກພຣະເຈົ້າເຮັດໃຫ້ສົມບູນ ຫຼື ເຈົ້າຈະຖືກພຣະເຈົ້າຂ້ຽນຕີ ແລະ ສາບແຊ່ງແທນບໍ? ແມ່ນຫຍັງຄືມຸມມອງຂອງເຈົ້າກ່ຽວກັບເລື່ອງການເປັນພະຍານໃຫ້ກັບພຣະເຈົ້າຢ່າງແທ້ຈິງ? ຜູ້ຄົນຄວນເຮັດແບບໃດໃນສະພາບແວດລ້ອມໃດໜຶ່ງ ເພື່ອເປັນພະຍານແທ້ຈິງໃຫ້ກັບພຣະເຈົ້າ? ຍ້ອນພຣະເຈົ້າຕົວຈິງໄດ້ເປີດເຜີຍຫຼາຍຢ່າງໃນພາລະກິດຕົວຈິງຂອງພຣະອົງໃນຕົວເຈົ້າ, ເປັນຫຍັງເຈົ້າຈຶ່ງຄິດທີ່ຈະຈາກໄປຢູ່ສະເໝີ? ຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າແມ່ນເພື່ອພຣະເຈົ້າບໍ? ສຳລັບພວກເຈົ້າສ່ວນໃຫຍ່ແລ້ວ, ຄວາມເຊື່ອຂອງພວກເຈົ້າແມ່ນສ່ວນໜຶ່ງຂອງການຄິດໄລ່ທີ່ພວກເຈົ້າເຮັດດ້ວຍຕົນເອງ, ສຳລັບການສະແຫວງຫາຜົນປະໂຫຍດສ່ວນຕົວຂອງພວກເຈົ້າເອງ. ມີໜ້ອຍຄົນຫຼາຍທີ່ເຊື່ອໃນພຣະເຈົ້າ ຍ້ອນພຣະເຈົ້າ; ສິ່ງນີ້ບໍ່ແມ່ນຄວາມກະບົດບໍ?

ເປົ້າໝາຍຂອງພາລະກິດແຫ່ງການຫຼໍ່ຫຼອມຫຼັກໆແລ້ວແມ່ນເພື່ອເຮັດໃຫ້ຄວາມເຊື່ອຂອງຜູ້ຄົນສົມບູນ ແລະ ໃນທີ່ສຸດແລ້ວ ສິ່ງທີ່ຖືກບັນລຸກໍຄືເຈົ້າຕ້ອງການໜີຈາກ ແຕ່ໃນເວລາດຽວກັນ ເຈົ້າບໍ່ສາມາດໜີຈາກໄດ້; ບາງຄົນຍັງສາມາດມີຄວາມເຊື່ອແມ່ນແຕ່ໃນຕອນທີ່ພວກເຂົາປາສະຈາກຄວາມຫວັງແມ່ນແຕ່ໜ້ອຍດຽວ; ແລະ ຜູ້ຄົນບໍ່ມີຄວາມຫວັງທີ່ກ່ຽວຂ້ອງກັບອະນາຄົດຂອງພວກເຂົາເອງອີກຕໍ່ໄປ. ໃນເວລານີ້ເທົ່ານັ້ນ ການຫຼໍ່ຫຼອມຂອງພຣະເຈົ້າຈຶ່ງຈະສິ້ນສຸດລົງ. ມະນຸດຍັງບໍ່ໄດ້ໄປເຖິງຂັ້ນຕອນຂອງການໝູນວຽນລະຫວ່າງຊີວິດ ແລະ ຄວາມຕາຍ ແລະ ພວກເຂົາຍັງບໍ່ໄດ້ຊີມລົດຊາດແຫ່ງຄວາມຕາຍ, ສະນັ້ນ ຂະບວນການຫຼໍ່ຫຼອມຈຶ່ງຍັງບໍ່ເຖິງຈຸດສິ້ນສຸດເທື່ອ. ແມ່ນແຕ່ຄົນທີ່ຢູ່ໃນບາດກ້າວຂອງຜູ້ບໍລິການກໍບໍ່ໄດ້ຖືກຫຼໍ່ຫຼອມຈົນເຖິງທີ່ສຸດ. ໂຢບໄດ້ຜ່ານການຫຼໍ່ຫຼອມຈົນເຖິງທີ່ສຸດແລ້ວ ແລະ ເພິ່ນບໍ່ມີຫຍັງໃຫ້ເພິ່ງພາເລີຍ. ຜູ້ຄົນຕ້ອງປະສົບກັບການຫຼໍ່ຫຼອມຈົນເຖິງຈຸດທີ່ພວກເຂົາບໍ່ມີຄວາມຫວັງ ແລະ ບໍ່ມີຫຍັງໃຫ້ເພິ່ງພາເລີຍ, ມີແຕ່ສິ່ງນີ້ທີ່ເປັນການຫຼໍ່ຫຼອມທີ່ແທ້ຈິງ. ໃນລະຫວ່າງເວລາຂອງຜູ້ບໍລິການ, ຖ້າຫົວໃຈຂອງເຈົ້າສະຫງົບຕໍ່ໜ້າພຣະເຈົ້າຢູ່ສະເໝີ ແລະ ຖ້າບໍ່ວ່າພຣະອົງຈະເຮັດຫຍັງ

ກໍຕາມ ແລະ ບໍ່ວ່າຄວາມປະສົງຂອງພຣະເຈົ້າສຳລັບເຈົ້າຈະແມ່ນຫຍັງກໍຕາມ, ເຈົ້າເຊື່ອຟັງການຈັດແຈງຂອງພຣະອົງຢູ່ສະເໝີ, ແລ້ວໃນປາຍທາງ ເຈົ້າກໍຈະເຂົ້າໃຈທຸກສິ່ງທີ່ພຣະເຈົ້າໄດ້ກະທຳ. ເຈົ້າຜະເຊີນກັບການທົດລອງຂອງໂຢບ ແລະ ໃນເວລານັ້ນ ເຈົ້າໄດ້ຜ່ານການທົດລອງຂອງເປໂຕ. ເມື່ອໂຢບຖືກທົດສອບ, ເພິ່ນຢືນເປັນພະຍານ ແລະ ໃນທີ່ສຸດແລ້ວ ພຣະເຢໂຮວາກໍໄດ້ເປີດເຜີຍຕໍ່ເພິ່ນ. ມີແຕ່ຫຼັງຈາກທີ່ເພິ່ນໄດ້ຢືນເປັນພະຍານ ເພິ່ນຈຶ່ງສົມຄວນໄດ້ເຫັນໃບໜ້າຂອງພຣະເຈົ້າ. ເປັນຫຍັງຈຶ່ງເວົ້າວ່າ "ເຮົາລີ້ລັບຈາກດິນແດນທີ່ສົກກະປົກ ແຕ່ສຳແດງຕົວເຮົາເອງຕໍ່ອານາຈັກທີ່ບໍລິສຸດ"? ນັ້ນໝາຍຄວາມວ່າ ມີແຕ່ເມື່ອເຈົ້າບໍລິສຸດ ແລະ ຢືນເປັນພະຍານເທົ່ານັ້ນ ເຈົ້າຈຶ່ງມີສັກສີທີ່ຈະເຫັນໃບໜ້າຂອງພຣະເຈົ້າ. ຖ້າເຈົ້າບໍ່ສາມາດຢືນເປັນພະຍານໃຫ້ກັບພຣະອົງ, ເຈົ້າກໍບໍ່ມີສັກສີທີ່ຈະເຫັນໃບໜ້າຂອງພຣະອົງ. ຖ້າເຈົ້າຖອຍ ຫຼື ຕໍ່ວ່າພຣະເຈົ້າເມື່ອຜະເຊີນກັບການຫຼໍ່ຫຼອມ, ແລ້ວລົ້ມເຫຼວທີ່ຈະຢືນເປັນພະຍານໃຫ້ກັບພຣະອົງໄດ້ ແລະ ເປັນຕົວຕະລົກຂອງຊາຕານ, ແລ້ວເຈົ້າກໍຈະບໍ່ໄດ້ຮັບເອົາການປາກົດຂອງພຣະເຈົ້າ. ຖ້າເຈົ້າເປັນເໝືອນກັບໂຢບ ຜູ້ທີ່ສາບແຊ່ງເນື້ອໜັງຂອງເພິ່ນເອງໃນທ່າມກາງການທົດລອງ ແລະ ບໍ່ໄດ້ຕໍ່ວ່າພຣະເຈົ້າເລີຍ ແລະ ສາມາດກຽດຊັງເນື້ອໜັງຂອງເພິ່ນເອງ ໂດຍບໍ່ຕໍ່ວ່າ ຫຼື ເຮັດບາບຜ່ານຄຳເວົ້າຂອງເພິ່ນ, ແລ້ວເຈົ້າກໍກຳລັງຢືນເປັນພະຍານ. ເມື່ອເຈົ້າປະສົບກັບການຫຼໍ່ຫຼອມຈົນເຖິງລະດັບໃດໜຶ່ງ ແລະ ຍັງສາມາດເປັນເໝືອນກັບໂຢບ ໂດຍເຊື່ອຟັງຢູ່ຕໍ່ໜ້າພຣະເຈົ້າຢ່າງເຕັມທີ່ ແລະ ບໍ່ມີການຮຽກຮ້ອງໃດເລີຍກ່ຽວກັບພຣະອົງ ຫຼື ແນວຄິດຂອງເຈົ້າເອງ, ແລ້ວພຣະເຈົ້າກໍຈະປາກົດຕໍ່ເຈົ້າ. ຕອນນີ້ພຣະເຈົ້າຈະບໍ່ປາກົດຕໍ່ເຈົ້າ ເພາະວ່າ ເຈົ້າມີແນວຄິດຫຼາຍຢ່າງຂອງເຈົ້າເອງ, ຄວາມອະຄະຕິສ່ວນຕົວ, ຄວາມຄິດເຫັນແກ່ຕົວ, ຄວາມຕ້ອງການສ່ວນຕົວ ແລະ ຜົນປະໂຫຍດທາງເນື້ອໜັງ ແລະ ເຈົ້າບໍ່ເໝາະສົມທີ່ຈະເຫັນໃບໜ້າຂອງພຣະອົງ. ຖ້າເຈົ້າເຫັນພຣະເຈົ້າ, ເຈົ້າກໍຈະວັດແທກພຣະອົງດ້ວຍແນວຄິດຂອງເຈົ້າເອງ, ໂດຍການເຮັດແບບນັ້ນ, ພຣະອົງຈະຖືກເຈົ້າຄຶງໃສ່ໄມ້ກາງແຂນ. ຖ້າຫຼາຍສິ່ງເກີດຂຶ້ນກັບເຈົ້າ ໂດຍບໍ່ສອດຄ່ອງກັບແນວຄິດຂອງເຈົ້າ ແຕ່ເຈົ້າສາມາດປະຖິ້ມສິ່ງເຫຼົ່ານີ້ ແລະ ຮັບຄວາມຮູ້ກ່ຽວກັບການກະທຳຂອງພຣະເຈົ້າຈາກສິ່ງເຫຼົ່ານີ້ ແລະ ຖ້າໃນລະຫວ່າງການຫຼໍ່ຫຼອມ ເຈົ້າເປີດເຜີຍຫົວໃຈແຫ່ງຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້າ, ແລ້ວນີ້ແມ່ນການຢືນເປັນພະຍານ. ຖ້າເຮືອນຂອງເຈົ້າສະຫງົບສຸກ, ເຈົ້າໄດ້ຮັບຄວາມສຸກສະບາຍທາງເນື້ອໜັງ, ບໍ່ມີໃຜຂົ່ມເຫັງເຈົ້າ ແລະ ອ້າຍເອື້ອຍນ້ອງຂອງເຈົ້າທີ່ຢູ່ໃນຄຣິສຕະຈັກກໍເຊື່ອຟັງເຈົ້າ, ເຈົ້າຈະສາມາດສຳແດງຫົວໃຈແຫ່ງຄວາມຮັກຂອງເຈົ້າສຳລັບພຣະເຈົ້າໄດ້ບໍ? ສະຖານະການນີ້ຈະສາມາດຫຼໍ່ຫຼອມເຈົ້າໄດ້ບໍ? ມັນແມ່ນຜ່ານການຫຼໍ່ຫຼອມເທົ່ານັ້ນ ຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າຈຶ່ງຈະຖືກສະແດງອອກໄດ້ ແລະ ມັນແມ່ນຜ່ານສິ່ງທີ່ເກີດຂຶ້ນໂດຍບໍ່ສອດຄ່ອງກັບແນວຄິດຂອງເຈົ້າເທົ່ານັ້ນ ເຈົ້າຈຶ່ງສາມາດຖືກເຮັດໃຫ້ສົມບູນໄດ້. ດ້ວຍບໍລິການຂອງຫຼາຍສິ່ງທີ່ຂັດກັນ ແລະ ເປັນລົບ ແລະ ໂດຍການນຳໃຊ້ການສຳແດງອອກທຸກຮູບແບບຂອງຊາຕານ, ການກະທຳຂອງມັນ, ການກ່າວໂທດຂອງມັນ, ການລົບກວນ ແລະ ການຫຼອກລວງຂອງມັນ, ພຣະເຈົ້າສະແດງໃບໜ້າທີ່ຊົ່ວຮ້າຍຂອງຊາຕານຢ່າງຊັດເຈນ ແລະ ດ້ວຍເຫດນັ້ນກໍເຮັດໃຫ້ຄວາມສາມາດຂອງເຈົ້າສົມບູນເພື່ອຈຳແນກຊາຕານ, ເພື່ອເຈົ້າອາດກຽດຊັງຊາຕານ ແລະ ປະຖິ້ມມັນ.

ສາມາດເວົ້າໄດ້ວ່າ ປະສົບການຫຼາຍຢ່າງຂອງເຈົ້າທີ່ກ່ຽວກັບຄວາມລົ້ມເຫຼວ, ຄວາມອ່ອນແອ ແລະ ເວລາແຫ່ງຄວາມຄິດລົບແມ່ນການທົດລອງຂອງພຣະເຈົ້າ. ນີ້ກໍຍ້ອນວ່າ ທຸກສິ່ງແມ່ນມາຈາກພຣະເຈົ້າ ແລະ ທຸກຢ່າງ ແລະ ທຸກເຫດການແມ່ນຢູ່ໃນມືຂອງພຣະອົງ. ບໍ່ວ່າເຈົ້າຈະລົ້ມເຫຼວ ຫຼື ບໍ່ວ່າເຈົ້າຈະອ່ອນແອ ແລະ ເຈົ້າຈະສະດຸດ ຫຼື ບໍ່, ມັນລ້ວນແລ້ວແຕ່ຂຶ້ນກັບພຣະເຈົ້າ ແລະ ຢູ່ພາຍໃນກຳມືຂອງພຣະອົງ. ຈາກທັດສະນະຂອງພຣະເຈົ້າ, ນີ້ແມ່ນການທົດລອງເຈົ້າ ແລະ ຖ້າເຈົ້າບໍ່ສາມາດຮັບຮູ້ສິ່ງນັ້ນໄດ້ ມັນກໍຈະກາຍມາເປັນການລໍ້ລວງ. ມີສະພາວະສອງປະເພດທີ່ຜູ້ຄົນຄວນຮັບຮູ້: ໜຶ່ງຢ່າງແມ່ນມາຈາກພຣະວິນຍານບໍລິສຸດ ແລະ ແຫຼ່ງທີ່ມາທີ່ເປັນໄປໄດ້ຂອງອີກຢ່າງແມ່ນຊາຕານ. ໜຶ່ງຢ່າງແມ່ນສະພາວະທີ່ພຣະວິນຍານບໍລິສຸດໃຫ້ແສງເຍືອງທາງກັບເຈົ້າ ແລະ ເຮັດໃຫ້ເຈົ້າຮູ້ຈັກຕົນເອງ, ກຽດຊັງ ແລະ ຮູ້ສຶກເສຍໃຈກັບຕົນເອງ ແລະ ສາມາດມີຄວາມຮັກທີ່ແທ້ຈິງໃຫ້ກັບພຣະເຈົ້າ, ວາງຫົວໃຈຂອງເຈົ້າເພື່ອເຮັດໃຫ້ພຣະອົງພໍໃຈ. ອີກສະພາວະໜຶ່ງແມ່ນ ສະພາວະທີ່ເຈົ້າຮູ້ຈັກຕົນເອງ, ແຕ່ເຈົ້າຍັງມີຄວາມຄິດລົບ ແລະ ອ່ອນແອ. ມັນສາມາດເວົ້າໄດ້ວ່າ ສະພາວະນີ້ແມ່ນການຫຼໍ່ຫຼອມຂອງພຣະເຈົ້າ ແລະ ນັ້ນຍັງແມ່ນການລໍ້ລວງຂອງຊາຕານ. ຖ້າເຈົ້າຮັບຮູ້ວ່າ ນີ້ແມ່ນຄວາມລອດພົ້ນຂອງພຣະເຈົ້າທີ່ມີໃຫ້ເຈົ້າ ແລະ ຖ້າເຈົ້າຮູ້ສຶກວ່າ ໃນຕອນນີ້ ເຈົ້າເປັນໜີ້ບຸນຄຸນພຣະອົງຢ່າງຫຼວງຫຼາຍ ແລະ ຕັ້ງແຕ່ນີ້ຕໍ່ໄປ ຖ້າເຈົ້າພະຍາຍາມທີ່ຈະຕອບແທນພຣະອົງ ແລະ ບໍ່ຕົກຢູ່ໃນຄວາມຊົ່ວຊ້າດັ່ງກ່າວອີກຕໍ່ໄປ, ຖ້າເຈົ້າໃຊ້ຄວາມພະຍາຍາມເພື່ອກິນ ແລະ ດື່ມພຣະທຳຂອງພຣະອົງ ແລະ ຖ້າເຈົ້າຄິດວ່າຕົນເອງຂາດເຂີນຢູ່ສະເໝີ ແລະ ມີຫົວໃຈແຫ່ງຄວາມປາຖະໜາ, ແລ້ວນີ້ກໍແມ່ນການທົດລອງຂອງພຣະເຈົ້າ. ຫຼັງຈາກທີ່ການທົນທຸກໄດ້ສິ້ນສຸດລົງ ແລະ ເຈົ້າໄດ້ກ້າວໄປຂ້າງໜ້າອີກຄັ້ງ, ພຣະເຈົ້າກໍຈະຍັງນຳພາ, ເຍືອງທາງ, ໃຫ້ແສງສະຫວ່າງ ແລະ ລ້ຽງບຳລຸງເຈົ້າ. ແຕ່ຖ້າເຈົ້າບໍ່ຮັບຮູ້ສິ່ງນັ້ນ ແລະ ເຈົ້າມີຄວາມຄິດລົບ ໂດຍປະຖິ້ມຕົນເອງໃຫ້ຢູ່ກັບຄວາມໝົດຫວັງເທົ່ານັ້ນ, ຖ້າເຈົ້າຄິດໃນລັກສະນະນີ້, ແລ້ວການລໍ້ລວງຂອງຊາຕານກໍມາເຖິງເຈົ້າແລ້ວ. ເມື່ອໂຢບປະສົບກັບການທົດລອງ, ພຣະເຈົ້າ ແລະ ຊາຕານກຳລັງເດີມພັນກັນ ແລະ ພຣະເຈົ້າອະນຸຍາດໃຫ້ຊາຕານເຮັດໃຫ້ໂຢບເຈັບປວດ. ເຖິງແມ່ນວ່າ ພຣະເຈົ້າເອງທີ່ກຳລັງທົດສອບໂຢບ, ໃນຄວາມຈິງແລ້ວ ມັນແມ່ນຊາຕານທີ່ມາຫາເພິ່ນ. ສຳລັບຊາຕານແລ້ວ ມັນກຳລັງລໍ້ລວງໂຢບ, ແຕ່ໂຢບຢູ່ຂ້າງພຣະເຈົ້າ. ຖ້າບໍ່ເປັນແບບນັ້ນ ແລ້ວເພິ່ນກໍຄົງຈະຕົກລົງສູ່ການລໍ້ລວງ. ທັນທີທີ່ຜູ້ຄົນຕົກລົງສູ່ການລໍ້ລວງ, ພວກເຂົາກໍຕົກລົງສູ່ໄພອັນຕະລາຍ. ສາມາດເວົ້າໄດ້ວ່າ ການປະສົບກັບການຫຼໍ່ຫຼອມແມ່ນການທົດລອງຈາກພຣະເຈົ້າ, ແຕ່ຖ້າເຈົ້າບໍ່ໄດ້ຢູ່ໃນສະພາວະທີ່ດີ ມັນກໍສາມາດເວົ້າໄດ້ວ່າ ເປັນການລໍ້ລວງຈາກຊາຕານ. ຖ້າເຈົ້າບໍ່ຊັດເຈນກ່ຽວກັບນິມິດ, ຊາຕານກໍຈະກ່າວຫາເຈົ້າ ແລະ ປິດບັງເຈົ້າໃນນິມິດລັກສະນະດັ່ງກ່າວ. ກ່ອນທີ່ເຈົ້າຈະຮູ້ຕົວ, ເຈົ້າແມ່ນຕົກລົງສູ່ການລໍ້ລວງແລ້ວ.

ຖ້າເຈົ້າບໍ່ມີປະສົບການກັບພາລະກິດຂອງພຣະເຈົ້າ ເຈົ້າກໍຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້ຈັກເທື່ອ. ໃນປະສົບການຂອງເຈົ້າ, ເຈົ້າຕ້ອງຍັງເຂົ້າສູ່ລາຍລະອຽດຕ່າງໆ. ຕົວຢ່າງເຊັ່ນ ແມ່ນຫຍັງຄືສິ່ງທີ່ນຳພາໃຫ້ເຈົ້າພັດທະນາແນວຄິດ ແລະ ແຮງຈູງໃຈທີ່ຫຼາຍເກີນໄປ ແລະ ເຈົ້າຕ້ອງແກ້ໄຂບັນຫາເຫຼົ່ານີ້ດ້ວຍການປະຕິບັດທີ່ເໝາະສົມຫຍັງແດ່? ຖ້າເຈົ້າສາມາດມີປະສົບການກັບພາລະກິດຂອງພຣະເຈົ້າ,

ນີ້ກໍໝາຍຄວາມວ່າ ເຈົ້າມີວຸດທິພາວະ. ຖ້າເຈົ້າພຽງແຕ່ເບິ່ງຄືວ່າມີຄວາມຫ້າວຫັນ, ນີ້ກໍບໍ່ແມ່ນວຸດທິພາວະທີ່ແທ້ຈິງ ແລະ ເຈົ້າຈະບໍ່ສາມາດຍຶດໝັ້ນໄດ້ຢ່າງແນ່ນອນ. ມີແຕ່ເມື່ອພວກເຈົ້າສາມາດຜະເຊີນກັບພາລະກິດຂອງພຣະເຈົ້າ ແລະ ເຈົ້າສາມາດຜະເຊີນ ແລະ ໄຕ່ຕອງພາລະກິດຂອງພຣະເຈົ້າໃນເວລາໃດກໍຕາມ ແລະ ສະຖານທີ່ໃດກໍຕາມ, ເມື່ອໃດພວກເຈົ້າຈຶ່ງສາມາດອອກຈາກຄົນລ້ຽງແກະ, ດຳລົງຊີວິດຢ່າງເປັນອິດສະຫຼະໂດຍເພິ່ງພາພຣະເຈົ້າ ແລະ ພວກເຈົ້າສາມາດເຫັນການກະທຳທີ່ແທ້ຈິງຂອງພຣະເຈົ້າ, ມີແຕ່ເມື່ອນັ້ນ ຄວາມປະສົງຂອງພຣະເຈົ້າຈຶ່ງຈະຖືກເຮັດໃຫ້ສຳເລັດ. ໃນຕອນນີ້, ຄົນສ່ວນໃຫຍ່ບໍ່ຮູ້ຈັກວິທີຜະເຊີນກັບພາລະກິດນັ້ນ ແລະ ເມື່ອພວກເຂົາພົບກັບບັນຫາ, ພວກເຂົາກໍບໍ່ຮູ້ວິທີຈັດການກັບບັນຫານັ້ນ; ພວກເຂົາບໍ່ສາມາດມີປະສົບການກັບພາລະກິດຂອງພຣະເຈົ້າ ແລະ ພວກເຂົາບໍ່ສາມາດນຳພາຊີວິດຝ່າຍວິນຍານໄດ້. ເຈົ້າຕ້ອງນຳພຣະທຳ ແລະ ພາລະກິດຂອງພຣະເຈົ້າເຂົ້າສູ່ຊີວິດຕົວຈິງຂອງເຈົ້າ.

ບາງເທື່ອ ພຣະເຈົ້າມອບຄວາມຮູ້ສຶກປະເພດໃດໜຶ່ງໃຫ້ກັບເຈົ້າ, ຄວາມຮູ້ສຶກທີ່ເຮັດໃຫ້ເຈົ້າສູນເສຍຄວາມສຸກພາຍໃນຂອງເຈົ້າ ແລະ ສູນເສຍການສະຖິດຂອງພຣະເຈົ້າ ຈົນເຈົ້າຕົກລົງສູ່ຄວາມມືດມົວ. ນີ້ແມ່ນການຫຼໍ່ຫຼອມຊະນິດໜຶ່ງ. ເມື່ອໃດກໍຕາມທີ່ເຈົ້າເຮັດບາງສິ່ງບາງຢ່າງ ມັນກໍຈະມີການຜິດພາດຢູ່ສະເໝີ ຫຼື ເຈົ້າຊົນຝາ. ນີ້ແມ່ນການລົງວິໄນຂອງພຣະເຈົ້າ. ບາງເທື່ອ ເມື່ອເຈົ້າເຮັດບາງສິ່ງທີ່ບໍ່ເຊື່ອຟັງ ແລະ ກະບົດຕໍ່ພຣະເຈົ້າ, ບໍ່ມີຜູ້ໃດອາດຮູ້ຈັກມັນໄດ້, ແຕ່ພຣະເຈົ້າຮູ້. ພຣະອົງຈະບໍ່ປ່ອຍໃຫ້ເຈົ້າໄປ ແລະ ພຣະອົງຈະລົງວິໄນເຈົ້າ. ພາລະກິດຂອງພຣະວິນຍານບໍລິສຸດມີລາຍລະອຽດຫຼາຍ. ພຣະອົງສັງເກດຄຳເວົ້າ ແລະ ການກະທຳທຸກຢ່າງຂອງຜູ້ຄົນຢ່າງລະມັດລະວັງ, ການປະພຶດ ແລະ ການເຄື່ອນໄຫວທຸກຢ່າງຂອງພວກເຂົາ ແລະ ຄວາມຄິດ ແລະ ແນວຄິດທຸກຢ່າງຂອງພວກເຂົາ ເພື່ອວ່າຜູ້ຄົນຈະສາມາດໄດ້ຮັບເອົາຄວາມສຳນຶກພາຍໃນກ່ຽວກັບສິ່ງເຫຼົ່ານີ້. ເຈົ້າເຮັດບາງສິ່ງບາງຢ່າງຄັ້ງໜຶ່ງ ແລະ ມັນກໍຜິດພາດ, ເຈົ້າເຮັດສິ່ງນັ້ນອີກຄັ້ງ ແລະ ມັນກໍຍັງຜິດພາດ ແລະ ເຈົ້າຈະມາເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດເທື່ອລະໜ້ອຍ. ຜ່ານການລົງວິໄນຫຼາຍຄັ້ງ, ເຈົ້າຈະຮູ້ວ່າ ຕ້ອງເຮັດແບບໃດເພື່ອໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ ແລະ ແມ່ນຫຍັງທີ່ບໍ່ສອດຄ່ອງກັບຄວາມປະສົງຂອງພຣະອົງ. ໃນທີ່ສຸດແລ້ວ, ເຈົ້າຈະມີການຕອບສະໜອງທີ່ຖືກຕ້ອງຕໍ່ການນຳພາຂອງພຣະວິນຍານບໍລິສຸດຈາກຂ້າງໃນຕົວເຈົ້າ. ບາງຄັ້ງ ເຈົ້າຈະກະບົດ ແລະ ເຈົ້າຈະຖືກພຣະເຈົ້າຕຳນິຕິຕຽນຈາກຂ້າງໃນ. ທຸກສິ່ງເຫຼົ່ານີ້ແມ່ນມາຈາກການລົງວິໄນຂອງພຣະເຈົ້າ. ຖ້າເຈົ້າບໍ່ເຊີດຊູບູຊາພຣະທຳຂອງພຣະເຈົ້າ, ຖ້າເຈົ້າດູຖູກພາລະກິດຂອງພຣະອົງ, ແລ້ວພຣະອົງຈະບໍ່ສົນໃຈເຈົ້າເລີຍ. ຍິ່ງເຈົ້າຈິງຈັງກັບພຣະທຳຂອງພຣະເຈົ້າຫຼາຍສໍ່າໃດ, ພຣະອົງຈະຍິ່ງໃຫ້ແສງສະຫວ່າງກັບເຈົ້າຫຼາຍສໍ່ານັ້ນ. ໃນຕອນນີ້, ມີບາງຄົນໃນຄຣິສຕະຈັກທີ່ມີຄວາມເຊື່ອທີ່ວຸ້ນວາຍ ແລະ ສັບສົນ ແລະ ພວກເຂົາເຮັດຫຼາຍໆສິ່ງທີ່ບໍ່ເໝາະສົມ ແລະ ປະພຶດຢ່າງບໍ່ມີວິໄນ ແລະ ດ້ວຍເຫດນີ້ ພາລະກິດຂອງພຣະວິນຍານບໍລິສຸດກໍບໍ່ສາມາດເຫັນໄດ້ຢ່າງຊັດເຈນໃນຕົວພວກເຂົາ. ບາງຄົນປະຖິ້ມໜ້າທີ່ຂອງພວກເຂົາຢູ່ເບື້ອງຫຼັງເພື່ອເຫັນແກ່ການຫາເງິນ, ອອກໄປດຳເນີນທຸລະກິດໂດຍບໍ່ຖືກລົງວິໄນ; ຄົນປະເພດນັ້ນຍິ່ງຕົກຢູ່ໃນອັນຕະລາຍຫຼາຍຂຶ້ນ. ບໍ່

ແມ່ນວ່າ ພວກເຂົາຈະບໍ່ມີພາລະກິດຂອງພຣະວິນຍານໃນປັດຈຸບັນເທົ່ານັ້ນ, ແຕ່ໃນອະນາຄົດ ພວກເຂົາຈະຖືກເຮັດໃຫ້ສົມບູນໄດ້ຍາກ. ມີຫຼາຍຄົນທີ່ເຫັນພາລະກິດຂອງພຣະວິນຍານບໍລິສຸດໃນຕົວພວກເຂົາ ແລະ ບໍ່ເຫັນການລົງວິໄນໃນຕົວພວກເຂົາ. ພວກເຂົາເປັນຄົນທີ່ບໍ່ຊັດເຈນໃນຄວາມປະສົງຂອງພຣະເຈົ້າ ແລະ ບໍ່ຮູ້ຈັກພາລະກິດຂອງພຣະອົງ. ຄົນທີ່ສາມາດຍຶດໝັ້ນໃນລະຫວ່າງການຫຼໍ່ຫຼອມ, ຄົນທີ່ຕິດຕາມພຣະເຈົ້າບໍ່ວ່າພຣະອົງຈະເຮັດຫຍັງກໍຕາມ ແລະ ຢ່າງໜ້ອຍສຸດຄືບໍ່ສາມາດຈາກໄປໄດ້ ຫຼື ບັນລຸ 0,1% ຂອງສິ່ງທີ່ເປໂຕບັນລຸແມ່ນຖືວ່າກຳລັງເຮັດດີ, ແຕ່ພວກເຂົາບໍ່ມີຄຸນຄ່າໃນເລື່ອງການທີ່ພຣະເຈົ້າໃຊ້ພວກເຂົາ. ຫຼາຍຄົນເຂົ້າໃຈສິ່ງຕ່າງໆຢ່າງໄວວາ, ມີຄວາມຮັກທີ່ແທ້ຈິງສຳລັບພຣະເຈົ້າ ແລະ ສາມາດລື່ນລະດັບຂອງເປໂຕ ແລະ ພຣະເຈົ້າປະຕິບັດພາລະກິດແຫ່ງຄວາມສົມບູນໃນພວກເຂົາ. ການລົງວິໄນ ແລະ ການສ່ອງແສງສະຫວ່າງມາຫາຜູ້ຄົນດັ່ງກ່າວ ແລະ ຖ້າມີສິ່ງໃດໜຶ່ງໃນພວກເຂົາທີ່ບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ, ພວກເຂົາກໍສາມາດໂຍນມັນຖິ້ມໄດ້ທັນທີ. ຄົນປະເພດນີ້ເປັນຄືກັບທອງຄຳ, ເງິນ ແລະ ຫີນທີ່ມີຄ່າ, ຄຸນຄ່າຂອງພວກເຂົາແມ່ນສູງທີ່ສຸດ! ຖ້າພຣະເຈົ້າໄດ້ກະທຳພາລະກິດຫຼາຍປະເພດ ແຕ່ເຈົ້າຍັງເປັນຄືກັບດິນຊາຍ ຫຼື ກ້ອນຫີນ, ແລ້ວເຈົ້າກໍບໍ່ມີຄ່າຫຍັງເລີຍ!

ພາລະກິດຂອງພຣະເຈົ້າໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ແມ່ນເປັນຕາປະຫຼາດໃຈ ແລະ ບໍ່ສາມາດຢັ່ງເຖິງໄດ້. ພຣະອົງຈະເຮັດໃຫ້ຄົນກຸ່ມໜຶ່ງສົມບູນ ແລະ ກຳຈັດຄົນອື່ນ, ຍ້ອນມີຄົນທຸກປະເພດໃນຄຣິສຕະຈັກ, ມີຄົນທີ່ຮັກຄວາມຈິງ ແລະ ຄົນທີ່ບໍ່ຮັກ; ມີຄົນທີ່ຜະເຊີນກັບພາລະກິດຂອງພຣະເຈົ້າ ແລະ ຄົນທີ່ບໍ່ໄດ້ຜະເຊີນ; ມີຄົນທີ່ປະຕິບັດໜ້າທີ່ຂອງພວກເຂົາ ແລະ ຄົນທີ່ບໍ່ປະຕິບັດ; ມີຄົນທີ່ເປັນພະຍານໃຫ້ແກ່ພຣະເຈົ້າ ແລະ ຄົນທີ່ບໍ່ເປັນພະຍານ ແລະ ພວກເຂົາສ່ວນໜຶ່ງແມ່ນຜູ້ບໍ່ເຊື່ອ ແລະ ມະນຸດທີ່ຊົ່ວຮ້າຍ ແລະ ພວກເຂົາຈະຖືກກຳຈັດຢ່າງແນ່ນອນ. ຖ້າເຈົ້າບໍ່ຮູ້ຈັກພາລະກິດຂອງພຣະເຈົ້າຢ່າງຊັດເຈນ ແລ້ວເຈົ້າກໍຈະມີຄວາມຄິດລົບ; ນີ້ກໍເພາະວ່າພາລະກິດຂອງພຣະເຈົ້າສາມາດເຫັນໄດ້ໃນຄົນກຸ່ມນ້ອຍເທົ່ານັ້ນ. ໃນເວລານີ້ ມັນກໍຈະຊັດເຈນວ່າ ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງແມ່ນມີພາລະກິດຂອງພຣະວິນຍານບໍລິສຸດ, ໃນຂະນະທີ່ຄົນທີ່ບໍ່ຮັກພຣະອົງຢ່າງແທ້ຈິງແມ່ນຈະຖືກເປີດເຜີຍຜ່ານແຕ່ລະບາດກ້າວຂອງພາລະກິດຂອງພຣະອົງ. ພວກເຂົາຈະກາຍມາເປັນສິ່ງທີ່ຈະຖືກໂຍນອອກ. ຄົນເຫຼົ່ານີ້ຈະຖືກເປີດໂປງຕະຫຼອດເສັ້ນທາງແຫ່ງພາລະກິດຂອງການເອົາຊະນະ ແລະ ພວກເຂົາເປັນຄົນທີ່ບໍ່ມີຄຸນຄ່າທີ່ຈະຖືກເຮັດໃຫ້ສົມບູນເລີຍ. ຄົນທີ່ຖືກເຮັດໃຫ້ສົມບູນກໍຖືກພຣະເຈົ້າຮັບເອົາຢ່າງຄົບຖ້ວນສົມບູນ ແລະ ສາມາດຮັກພຣະເຈົ້າຄືກັບເປໂຕ. ຄົນທີ່ຖືກເອົາຊະນະກໍບໍ່ມີຄວາມຮັກທີ່ເປັນໄປດ້ວຍຄວາມສະໝັກໃຈ, ມີແຕ່ຄວາມຮັກທີ່ບໍ່ດີ້ນລົນ ແລະ ພວກເຂົາແມ່ນຖືກບັງຄັບໃຫ້ຮັກພຣະເຈົ້າ. ຄວາມຮັກທີ່ເປັນໄປດ້ວຍຄວາມສະໝັກໃຈຖືກພັດທະນາຜ່ານຄວາມເຂົ້າໃຈທີ່ໄດ້ຮັບຜ່ານປະສົບການຕົວຈິງ. ຄວາມຮັກນີ້ຄອບຄອງຫົວໃຈຂອງບຸກຄົນໃດໜຶ່ງ ແລະ ເຮັດໃຫ້ພວກເຂົາອຸທິດຕົນໃຫ້ກັບພຣະເຈົ້າຢ່າງສະໝັກໃຈ; ພຣະທຳຂອງພຣະເຈົ້າກາຍມາເປັນພື້ນຖານຂອງພວກເຂົາ ແລະ ພວກເຂົາສາມາດທົນທຸກເພື່ອພຣະເຈົ້າໄດ້. ແນ່ນອນ ນີ້ແມ່ນສິ່ງທີ່ຄົນຜູ້ເຊິ່ງຖືກພຣະເຈົ້າເຮັດໃຫ້ສົມບູນມີ. ຖ້າເຈົ້າພຽງແຕ່ສະແຫວງຫາເພື່ອຖືກເອົາຊະນະ, ແລ້ວເຈົ້າກໍບໍ່ສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້; ຖ້າພຣະເຈົ້າ

ພຽງແຕ່ບັນລຸເປົ້າໝາຍແຫ່ງຄວາມລອດພົ້ນຂອງພຣະອົງຜ່ານການເອົາຊະນະຜູ້ຄົນ, ແລ້ວບາດກ້າວຂອງຜູ້ບໍລິການກໍຈະສຳເລັດໜ້າທີ່ດັ່ງກ່າວ. ເຖິງຢ່າງໃດກໍຕາມ, ການເອົາຊະນະຜູ້ຄົນບໍ່ແມ່ນເປົ້າໝາຍສຸດທ້າຍຂອງພຣະເຈົ້າ ເຊິ່ງແມ່ນການເຮັດໃຫ້ຜູ້ຄົນສົມບູນ. ສະນັ້ນ ແທນທີ່ຈະເວົ້າວ່າ ຂັ້ນຕອນນີ້ແມ່ນພາລະກິດແຫ່ງການເອົາຊະນະ, ໃຫ້ເວົ້າວ່າ ມັນແມ່ນພາລະກິດແຫ່ງການເຮັດໃຫ້ສົມບູນ ແລະ ການກຳຈັດ. ບາງຄົນຍັງບໍ່ຖືກເອົາຊະນະຢ່າງສົມບູນ ແລະ ໃນເສັ້ນທາງແຫ່ງການເອົາຊະນະພວກເຂົາ, ກຸ່ມຄົນໜຶ່ງຈະຖືກເຮັດໃຫ້ສົມບູນ. ພາລະກິດສອງສ່ວນນີ້ໄດ້ຖືກປະຕິບັດຄຽງຄູ່ກັນໄປ. ຜູ້ຄົນຍັງບໍ່ໄດ້ອອກເດີນທາງ ແມ່ນແຕ່ໃນຕະຫຼອດໄລຍະເວລາທີ່ຍາວນານຂອງພາລະກິດດັ່ງກ່າວ ແລະ ສິ່ງນີ້ກໍສະແດງວ່າ ເປົ້າໝາຍຂອງການເອົາຊະນະແມ່ນຖືກບັນລຸແລ້ວ, ນີ້ແມ່ນຄວາມຈິງຂອງການຖືກເອົາຊະນະ. ການທົດລອງບໍ່ແມ່ນເພື່ອເຫັນແກ່ການເອົາຊະນະ, ແມ່ນເພື່ອເຫັນແກ່ການຖືກເຮັດໃຫ້ສົມບູນ. ຫາກປາສະຈາກການທົດລອງ, ຜູ້ຄົນຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ສະນັ້ນ ການທົດລອງກໍມີຄ່າແທ້ໆ! ໃນປັດຈຸບັນ, ຄົນກຸ່ມໜຶ່ງກຳລັງຖືກເຮັດໃຫ້ສົມບູນ ແລະ ຖືກຮັບເອົາ. ພອນສິບຢ່າງທີ່ກ່າວເຖິງກ່ອນໜ້ານີ້ ແມ່ນລ້ວນແລ້ວແຕ່ແນໃສ່ຄົນທີ່ຖືກເຮັດໃຫ້ສົມບູນ. ທຸກສິ່ງທີ່ກ່ຽວກັບການປ່ຽນແປງພາບລັກຂອງພວກເຂົາເທິງແຜ່ນດິນໂລກ ແມ່ນເພື່ອແນໃສ່ຄົນທີ່ຖືກເຮັດໃຫ້ສົມບູນ. ຄົນທີ່ບໍ່ຖືກເຮັດໃຫ້ສົມບູນແມ່ນບໍ່ມີຄຸນສົມບັດທີ່ຈະໄດ້ຮັບສັນຍາຂອງພຣະເຈົ້າໄດ້.

# ເມື່ອເຈົ້າປະສົບກັບການທົດລອງທີ່ເຈັບປວດເທົ່ານັ້ນ ເຈົ້າຈຶ່ງສາມາດຮູ້ຈັກຄວາມເປັນຕາຮັກຂອງພຣະເຈົ້າ

ໃນປັດຈຸບັນນີ້ ເຈົ້າຮັກພຣະເຈົ້າຫຼາຍສໍ່າໃດ? ແລ້ວ ເຈົ້າຮູ້ຈັກທຸກສິ່ງທີ່ພຣະເຈົ້າໄດ້ກະທຳໃນຕົວເຈົ້າຫຼາຍສໍ່າໃດ? ນີ້ແມ່ນສິ່ງທີ່ເຈົ້າຄວນຮຽນຮູ້. ເມື່ອພຣະເຈົ້າມາເຖິງແຜ່ນດິນໂລກ, ທຸກສິ່ງທີ່ພຣະອົງໄດ້ກະທຳໃນມະນຸດ ແລະ ຍອມໃຫ້ມະນຸດເຫັນແມ່ນເພື່ອວ່າມະນຸດຈະໄດ້ຮັກພຣະອົງ ແລະ ຮູ້ຈັກພຣະອົງຢ່າງແທ້ຈິງ. ໃນດ້ານໜຶ່ງ ການທີ່ມະນຸດສາມາດທົນທຸກເພື່ອພຣະເຈົ້າ ແລະ ໄດ້ມາໄກເຖິງຂະໜາດນີ້ແມ່ນຍ້ອນຄວາມຮັກຂອງພຣະເຈົ້າ ແລະ ໃນອີກດ້ານໜຶ່ງແມ່ນຍ້ອນຄວາມລອດພົ້ນຂອງພຣະເຈົ້າ; ຍິ່ງໄປກວ່ານັ້ນ, ມັນເປັນຍ້ອນພາລະກິດແຫ່ງການພິພາກສາ ແລະ ການຂ້ຽນຕີທີ່ພຣະເຈົ້າປະຕິບັດໃນມະນຸດ. ຖ້າພວກເຈົ້າປາສະຈາກການພິພາກສາ, ການຂ້ຽນຕີ ແລະ ການທົດລອງຂອງພຣະເຈົ້າ ແລະ ຖ້າພຣະເຈົ້າບໍ່ໄດ້ເຮັດໃຫ້ພວກເຈົ້າທົນທຸກ, ແລ້ວຄວາມຈິງກໍຄື ພວກເຈົ້າບໍ່ໄດ້ຮັກພຣະເຈົ້າແທ້ຈິງ. ຍິ່ງພາລະກິດຂອງພຣະເຈົ້າໃນມະນຸດຍິ່ງໃຫຍ່ສໍ່າໃດ ແລະ ຍິ່ງການທົນທຸກຂອງມະນຸດຍິ່ງໃຫຍ່ຫຼາຍສໍ່າໃດ, ມັນກໍຍິ່ງສະແດງໃຫ້ເຫັນວ່າພາລະກິດຂອງພຣະເຈົ້າມີຄວາມໝາຍຫຼາຍສໍ່ານັ້ນ ແລະ ຫົວໃຈຂອງມະນຸດກໍຍິ່ງສາມາດຮັກພຣະເຈົ້າຢ່າງແທ້ຈິງສໍ່ານັ້ນ. ເຈົ້າຮຽນຮູ້ວິທີຮັກພຣະເຈົ້າໄດ້ແນວໃດ? ຫາກປາສະຈາກການທໍລະມານ ແລະ ການຫຼໍ່ຫຼອມ, ຫາກປາສະຈາກການທົດລອງທີ່ເຈັບປວດ ແລະ ຍິ່ງໄປກວ່ານັ້ນ ຖ້າທຸກສິ່ງທີ່ພຣະເຈົ້າມອບໃຫ້ກັບມະນຸດແມ່ນພຣະຄຸນ, ຄວາມຮັກ ແລະ ຄວາມເມດຕາ, ແລ້ວເຈົ້າຈະສາມາດບັນລຸການຮັກພຣະເຈົ້າຢ່າງແທ້ຈິງໄດ້ບໍ? ໃນດ້ານໜຶ່ງ, ໃນລະຫວ່າງການທົດລອງຂອງພຣະເຈົ້າ ມະນຸດຮຽນຮູ້ຈັກຂໍ້ບົກຜ່ອງຂອງເຂົາ ແລະ ເຫັນວ່າ ເຂົາບໍ່ມີຄວາມໝາຍ, ເປັນຕາດູຖູກ ແລະ ຕໍ່າຕ້ອຍ, ເຂົາບໍ່ມີຫຍັງເລີຍ ແລະ ບໍ່ໄດ້ເປັນຫຍັງເລີຍ; ໃນອີກດ້ານໜຶ່ງ, ໃນລະຫວ່າງການທົດລອງຂອງພຣະອົງ ພຣະເຈົ້າສ້າງສະພາບແວດລ້ອມທີ່ແຕກຕ່າງກັນໃຫ້ກັບມະນຸດ ເພື່ອເຮັດໃຫ້ມະນຸດສາມາດພະເຊີນກັບຄວາມເປັນຕາຮັກຂອງພຣະເຈົ້າໄດ້ຫຼາຍຍິ່ງຂຶ້ນ. ເຖິງແມ່ນວ່າຄວາມເຈັບປວດມີຫຼາຍ ແລະ ບາງເທື່ອກໍບໍ່ສາມາດຜ່ານພົ້ນໄດ້ ແລະ ເຖິງຂັ້ນມີຄວາມໂສກເສົ້າຢ່າງໜັກ, ເມື່ອໄດ້ພະເຊີນກັບມັນ, ມະນຸດກໍເຫັນວ່າພາລະກິດຂອງພຣະເຈົ້າທີ່ຢູ່ໃນຕົວເຂົານັ້ນເປັນຕາຮັກຫຼາຍສໍ່າໃດ ແລະ ບົນພື້ນຖານນີ້ເທົ່ານັ້ນ ຈຶ່ງເກີດມີຄວາມຮັກແທ້ຈິງທີ່ມະນຸດມີຕໍ່ພຣະເຈົ້າ. ໃນປັດຈຸບັນ ມະນຸດເຫັນວ່າ ດ້ວຍພຣະຄຸນ, ຄວາມຮັກ ແລະ ຄວາມເມດຕາຂອງພຣະເຈົ້າພຽງຢ່າງດຽວ, ເຂົາແມ່ນບໍ່ສາມາດຮູ້ຈັກຕົນເອງໄດ້ຢ່າງແທ້ຈິງ ແລະ ແຮງໄກທີ່ເຂົາຈະສາມາດຮູ້ຈັກແກ່ນແທ້ຂອງມະນຸດ. ມີພຽງຜ່ານການຫຼໍ່ຫຼອມ ແລະ ການພິພາກສາຂອງພຣະເຈົ້າທັງສອງຢ່າງເທົ່ານັ້ນ ແລະ ໃນລະຫວ່າງຂະບວນການຫຼໍ່ຫຼອມດັ່ງກ່າວນັ້ນເອງ ມະນຸດຈຶ່ງສາມາດຮູ້ຈັກຂໍ້ບົກຜ່ອງຂອງເຂົາ ແລະ ຮູ້ວ່າເຂົາບໍ່ມີຫຍັງເລີຍ. ສະນັ້ນ, ຄວາມຮັກທີ່ມະນຸດມີໃຫ້ກັບພຣະເຈົ້າຈຶ່ງຖືກສ້າງຂຶ້ນບົນພື້ນຖານຂອງການຫຼໍ່ຫຼອມ ແລະ ການພິພາກສາຂອງພຣະເຈົ້າ. ຖ້າເຈົ້າພຽງແຕ່ມີຄວາມສຸກກັບພຣະຄຸນຂອງພຣະເຈົ້າ, ມີຊີວິດຄອບຄົວທີ່ສະຫງົບສຸກ ຫຼື ການອວຍພອນທາງວັດຖຸ, ແລ້ວເຈົ້າກໍບໍ່ໄດ້ຮັບເອົາ

ພຣະເຈົ້າ ແລະ ຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າກໍບໍ່ສາມາດຖືໄດ້ວ່າເປັນຜົນສຳເລັດ. ພຣະເຈົ້າໄດ້ດຳເນີນຂັ້ນຕອນໜຶ່ງຂອງພາລະກິດແຫ່ງພຣະຄຸນໃນເນື້ອໜັງ ແລະ ໄດ້ປະທານພອນທາງວັດຖຸໃຫ້ກັບມະນຸດແລ້ວ, ແຕ່ມະນຸດບໍ່ສາມາດຖືກເຮັດໃຫ້ສົມບູນດ້ວຍພຣະຄຸນ, ຄວາມຮັກ ແລະ ຄວາມເມດຕາພຽງຢ່າງດຽວ. ໃນປະສົບການຂອງມະນຸດ ເຂົາຜະເຊີນກັບຄວາມຮັກບາງຢ່າງຂອງພຣະເຈົ້າ ແລະ ເຫັນຄວາມຮັກ ແລະ ຄວາມເມດຕາຂອງພຣະເຈົ້າ, ແຕ່ເມື່ອໄດ້ຜະເຊີນໃນໄລຍະເວລາໜຶ່ງ, ເຂົາເຫັນວ່າພຣະຄຸນຂອງພຣະເຈົ້າ, ຄວາມຮັກຂອງພຣະອົງ ແລະ ຄວາມເມດຕາ ບໍ່ສາມາດເຮັດໃຫ້ມະນຸດສົມບູນ, ບໍ່ສາມາດເປີດເຜີຍສິ່ງທີ່ເສື່ອມຊາມຢູ່ພາຍໃນມະນຸດ ແລະ ບໍ່ສາມາດກຳຈັດມະນຸດອອກຈາກອຸປະນິໄສອັນເສື່ອມຊາມຂອງເຂົາ ຫຼື ເຮັດໃຫ້ຄວາມຮັກ ແລະ ຄວາມເຊື່ອຂອງເຂົາສົມບູນ. ພາລະກິດແຫ່ງພຣະຄຸນຂອງພຣະເຈົ້າແມ່ນພາລະກິດພຽງໄລຍະໜຶ່ງ ແລະ ມະນຸດບໍ່ສາມາດອາໄສການໄດ້ຮັບພຣະຄຸນຂອງພຣະເຈົ້າເພື່ອທີ່ຈະຮູ້ຈັກພຣະເຈົ້າ.

ພຣະເຈົ້າສຳເລັດການເຮັດໃຫ້ມະນຸດສົມບູນຜ່ານທາງໃດ? ສິ່ງນັ້ນຖືກເຮັດໃຫ້ສຳເລັດຜ່ານທາງອຸປະນິໄສທີ່ຊອບທຳຂອງພຣະອົງ. ອຸປະນິໄສຂອງພຣະເຈົ້າຫຼັກໆແມ່ນປະກອບດ້ວຍຄວາມຊອບທຳ, ຄວາມໂກດຮ້າຍ, ລິດທານຸພາບ, ການພິພາກສາ ແລະ ຄຳສາບແຊ່ງ ແລະ ການທີ່ພຣະອົງເຮັດໃຫ້ມະນຸດສົມບູນຫຼັກໆແມ່ນຜ່ານທາງພິພາກສາ. ບາງຄົນບໍ່ເຂົ້າໃຈ ແລະ ຖາມວ່າ ເປັນຫຍັງພຣະເຈົ້າຈຶ່ງສາມາດເຮັດໃຫ້ມະນຸດສົມບູນຜ່ານການພິພາກສາ ແລະ ຄຳສາບແຊ່ງເທົ່ານັ້ນ? ພວກເຂົາເວົ້າວ່າ "ຖ້າພຣະເຈົ້າຈະສາບແຊ່ງມະນຸດ, ມະນຸດຈະບໍ່ຕາຍບໍ? ຖ້າພຣະເຈົ້າຈະພິພາກສາມະນຸດ, ມະນຸດຈະບໍ່ຖືກກ່າວໂທດບໍ? ແລ້ວເຂົາຈະຍັງຖືກເຮັດໃຫ້ສົມບູນໄດ້ແນວໃດ?" ສິ່ງດັ່ງກ່າວແມ່ນຄຳເວົ້າຂອງຄົນທີ່ບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ. ສິ່ງທີ່ພຣະເຈົ້າສາບແຊ່ງແມ່ນຄວາມບໍ່ເຊື່ອຟັງຂອງມະນຸດ ແລະ ສິ່ງທີ່ພຣະອົງພິພາກສາແມ່ນຄວາມບາບຂອງມະນຸດ. ເຖິງແມ່ນວ່າພຣະອົງກ່າວຢ່າງໂຫດຮ້າຍ ແລະ ຢ່າງບໍ່ຢຸດຢັ້ງ, ພຣະອົງກໍເປີດເຜີຍທຸກສິ່ງທີ່ຢູ່ພາຍໃນມະນຸດ, ເປີດເຜີຍຜ່ານພຣະທຳທີ່ເຂັ້ມງວດເຫຼົ່ານີ້ທີ່ສຳຄັນຕໍ່ມະນຸດ, ແຕ່ຜ່ານການພິພາກສາດັ່ງກ່າວ, ພຣະອົງໄດ້ມອບຄວາມຮູ້ທີ່ເລິກເຊິ່ງກ່ຽວກັບທາດແທ້ຂອງເນື້ອໜັງໃຫ້ກັບມະນຸດ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງຍອມເຊື່ອຟັງຢູ່ຕໍ່ໜ້າພຣະເຈົ້າ. ເນື້ອໜັງຂອງມະນຸດແມ່ນມາຈາກຄວາມບາບ ແລະ ມາຈາກຊາຕານ, ມັນແມ່ນການບໍ່ເຊື່ອຟັງ ແລະ ມັນຄືເປົ້າໝາຍແຫ່ງການຂ້ຽນຕີຂອງພຣະເຈົ້າ. ດ້ວຍເຫດນັ້ນ ເພື່ອເຮັດໃຫ້ມະນຸດຮູ້ຈັກຕົນເອງ, ພຣະທຳແຫ່ງການພິພາກສາຂອງພຣະເຈົ້າຕ້ອງເກີດຂຶ້ນກັບເຂົາ ແລະ ຕ້ອງໄດ້ໃຊ້ການຫຼໍ່ຫຼອມທຸກຮູບແບບ; ມີແຕ່ເມື່ອນັ້ນ ພາລະກິດຂອງພຣະເຈົ້າຈຶ່ງຈະສາມາດມີປະສິດທິພາບ.

ຈາກພຣະທຳທີ່ພຣະເຈົ້າກ່າວ ສາມາດເຫັນໄດ້ວ່າ ພຣະອົງໄດ້ກ່າວປະນາມເນື້ອໜັງຂອງມະນຸດແລ້ວ. ແລ້ວພຣະທຳເຫຼົ່ານີ້ບໍ່ແມ່ນພຣະທຳແຫ່ງຄຳສາບແຊ່ງບໍ? ພຣະທຳທີ່ພຣະເຈົ້າກ່າວເປີດເຜີຍທາດແທ້ຂອງມະນຸດ ແລະ ຜ່ານການເປີດເຜີຍດັ່ງກ່າວ ເຂົາກໍຖືກພິພາກສາ ແລະ ເມື່ອເຂົາເຫັນວ່າເຂົາບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າ, ເຂົາກໍຮູ້ສຶກເຖິງຄວາມໂສກເສົ້າ ແລະຄວາມເສຍໃຈຢູ່ຂ້າງໃນ, ເຂົາຮູ້ສຶກວ່າ ເຂົາເປັນໜີ້ບຸນຄຸນພຣະເຈົ້າຫຼາຍ ແລະ ບໍ່ສາມາດບັນລຸຕາມ

ຄວາມປະສົງຂອງພຣະເຈົ້າໄດ້. ມີຫຼາຍຄັ້ງທີ່ພຣະວິນຍານບໍລິສຸດລົງວິໄນເຈົ້າຈາກຂ້າງໃນ ແລະ ວິໄນນີ້ແມ່ນມາຈາກການພິພາກສາຂອງພຣະເຈົ້າ; ມີຫຼາຍຄັ້ງທີ່ພຣະເຈົ້າປະນາມເຈົ້າ ແລະ ເຊື່ອງໃບໜ້າຂອງພຣະອົງຈາກເຈົ້າ, ເມື່ອພຣະອົງບໍ່ສົນໃຈເຈົ້າ ແລະ ບໍ່ປະຕິບັດພາລະກິດພາຍໃນເຈົ້າ ໂດຍຂ້ຽນຕີເຈົ້າຢ່າງງຽບໆເພື່ອຫຼໍ່ຫຼອມເຈົ້າ. ພາລະກິດຂອງພຣະເຈົ້າໃນມະນຸດຫຼັກໆແມ່ນເພື່ອເປີດເຜີຍອຸປະນິໄສທີ່ຊອບທຳຂອງພຣະອົງ. ແລ້ວ ມະນຸດເປັນພະຍານຫຍັງແດ່ໃຫ້ກັບພຣະເຈົ້າ? ເຂົາເປັນພະຍານວ່າພຣະເຈົ້າເປັນພຣະເຈົ້າທີ່ຊອບທຳ, ອຸປະນິໄສຂອງພຣະອົງແມ່ນຄວາມຊອບທຳ, ຄວາມໂກດຮ້າຍ, ການຂ້ຽນຕີ ແລະ ການພິພາກສາ; ມະນຸດເປັນພະຍານເຖິງອຸປະນິໄສທີ່ຊອບທຳຂອງພຣະເຈົ້າ. ພຣະເຈົ້າໃຊ້ການພິພາກສາຂອງພຣະອົງເພື່ອເຮັດໃຫ້ມະນຸດສົມບູນ, ພຣະອົງໄດ້ຮັກມະນຸດ ແລະ ຊ່ວຍມະນຸດໃຫ້ລອດພົ້ນ, ແຕ່ມີຫຍັງແດ່ທີ່ຢູ່ພາຍໃນຄວາມຮັກຂອງພຣະອົງ? ມີການພິພາກສາ, ລິດທານຸພາບ, ຄວາມໂກດຮ້າຍ ແລະ ຄຳສາບແຊ່ງ. ເຖິງແມ່ນວ່າພຣະເຈົ້າສາບແຊ່ງມະນຸດໃນອະດີດ, ພຣະອົງກໍບໍ່ໄດ້ໂຍນມະນຸດທັງໝົດລົງສູ່ຂຸມເລິກທີ່ສຸດ, ແຕ່ໃຊ້ວິທີນັ້ນເພື່ອຫຼໍ່ຫຼອມຄວາມເຊື່ອຂອງມະນຸດ; ພຣະອົງບໍ່ເຮັດໃຫ້ມະນຸດເຖິງແກ່ຄວາມຕາຍ, ແຕ່ປະຕິບັດເພື່ອເຮັດໃຫ້ມະນຸດສົມບູນ. ທາດແທ້ຂອງເນື້ອໜັງແມ່ນມາຈາກຊາຕານ ເຊິ່ງພຣະເຈົ້າເວົ້ານັ້ນແມ່ນຖືກຕ້ອງທີ່ສຸດ, ແຕ່ຄວາມຈິງທີ່ພຣະເຈົ້າປະຕິບັດບໍ່ໄດ້ເປັນໄປຕາມພຣະທຳຂອງພຣະອົງ. ພຣະອົງສາບແຊ່ງເຈົ້າເພື່ອເຈົ້າຈະຮັກພຣະອົງ ແລະ ເພື່ອເຈົ້າຈະໄດ້ຮູ້ຈັກທາດແທ້ຂອງເນື້ອໜັງ; ພຣະອົງຂ້ຽນຕີເຈົ້າເພື່ອປຸກໃຫ້ເຈົ້າຕື່ນ, ເພື່ອເຮັດໃຫ້ເຈົ້າຮູ້ຈັກຂໍ້ບົກຜ່ອງທີ່ຢູ່ພາຍໃນຕົວເຈົ້າ ແລະ ເພື່ອຮູ້ຈັກຄວາມບໍ່ມີຄ່າທັງໝົດຂອງມະນຸດ. ສະນັ້ນ, ຄຳສາບແຊ່ງຂອງພຣະເຈົ້າ, ການພິພາກສາຂອງພຣະອົງ ແລະ ລິດທານຸພາບ ແລະ ຄວາມໂກດຮ້າຍຂອງພຣະອົງ, ສິ່ງເຫຼົ່ານີ້ແມ່ນມີເພື່ອເຮັດໃຫ້ມະນຸດສົມບູນ. ທຸກສິ່ງທີ່ພຣະເຈົ້າກະທຳໃນປັດຈຸບັນ ແລະ ອຸປະນິໄສທີ່ຊອບທຳທີ່ພຣະເຈົ້າເປີດເຜີຍພາຍໃນພວກເຈົ້າ, ທຸກສິ່ງແມ່ນເພື່ອເຮັດໃຫ້ມະນຸດສົມບູນ ແລະ ສິ່ງດັ່ງກ່າວແມ່ນຄວາມຮັກຂອງພຣະເຈົ້າ.

ໃນແນວຄິດດັ້ງເດີມຂອງມະນຸດ, ເຂົາເຊື່ອວ່າ ຄວາມຮັກຂອງພຣະເຈົ້າຄືພຣະຄຸນ, ຄວາມເມດຕາ ແລະ ຄວາມສົງສານຂອງພຣະອົງສຳລັບຄວາມອ່ອນແອຂອງມະນຸດ. ເຖິງແມ່ນວ່າສິ່ງເຫຼົ່ານີ້ຈະແມ່ນຄວາມຮັກຂອງພຣະເຈົ້າເຊັ່ນກັນ, ພວກມັນກໍບໍ່ເປັນພຽງດ້ານໜຶ່ງ ແລະ ບໍ່ແມ່ນວິທີຫຼັກທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນ. ບາງຄົນເລີ່ມຕົ້ນເຊື່ອໃນພຣະເຈົ້າຍ້ອນຄວາມເຈັບປ່ວຍ. ຄວາມເຈັບປ່ວຍນີ້ແມ່ນພຣະຄຸນທີ່ພຣະເຈົ້າມີຕໍ່ເຈົ້າ; ຫາກປາສະຈາກສິ່ງນີ້, ເຈົ້າຈະບໍ່ເຊື່ອໃນພຣະເຈົ້າ ແລະ ຖ້າເຈົ້າບໍ່ເຊື່ອໃນພຣະເຈົ້າ ແລ້ວເຈົ້າກໍຈະບໍ່ມາໄກໄດ້ປານນີ້ ແລະ ສະນັ້ນ ແມ່ນແຕ່ພຣະຄຸນນີ້ກໍເປັນຄວາມຮັກຂອງພຣະເຈົ້າ. ໃນສະໄໝແຫ່ງຄວາມເຊື່ອໃນພຣະເຢຊູ, ຜູ້ຄົນເຮັດຫຼາຍຢ່າງທີ່ພຣະເຈົ້າບໍ່ມັກ ເພາະພວກເຂົາບໍ່ເຂົ້າໃຈຄວາມຈິງ, ແຕ່ພຣະເຈົ້າກໍມີຄວາມຮັກ ແລະ ຄວາມເມດຕາ ແລະ ພຣະອົງໄດ້ນຳມະນຸດມາໄກປານນີ້ ແລະ ເຖິງແມ່ນວ່າມະນຸດບໍ່ເຂົ້າໃຈຫຍັງເລີຍ, ພຣະເຈົ້າກໍຍອມໃຫ້ມະນຸດຕິດຕາມພຣະອົງຄືເກົ່າ ແລະ ຍິ່ງໄປກວ່ານັ້ນ ພຣະອົງໄດ້ນຳພາມະນຸດມາເຖິງປັດຈຸບັນ. ນີ້ບໍ່ແມ່ນຄວາມຮັກຂອງພຣະເຈົ້າບໍ? ສິ່ງທີ່ຖືກສະແດງອອກໃນອຸປະນິໄສຂອງພຣະເຈົ້າແມ່ນຄວາມຮັກຂອງພຣະເຈົ້າ,

ສິ່ງນີ້ຖືກຕ້ອງທີ່ສຸດ! ເມື່ອການສ້າງຄຣິສຕະຈັກໄດ້ມາເຖິງຈຸດສູງສຸດ, ພຣະເຈົ້າກໍປະຕິບັດພາລະກິດຂັ້ນຕອນຂອງຜູ້ບໍລິການ ແລະ ໂຍນມະນຸດຖິ້ມລົງສູ່ຂຸມເລິກທີ່ສຸດ. ພຣະທຳໃນໄລຍະຂອງຜູ້ບໍລິການແມ່ນຄຳສາບແຊ່ງທັງໝົດ ນັ້ນກໍຄື ຄຳສາບແຊ່ງເນື້ອໜັງຂອງເຈົ້າ, ຄຳສາບແຊ່ງຂອງອຸປະນິໄສຊົ່ວຊ້າທີ່ເສື່ອມຊາມຂອງເຈົ້າ ແລະ ຄຳສາບແຊ່ງຕໍ່ສິ່ງຕ່າງໆຂອງເຈົ້າທີ່ບໍ່ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ພາລະກິດທີ່ພຣະເຈົ້າກະທຳໃນບາດກ້າວນັ້ນແມ່ນຖືກສະແດງອອກດັ່ງສະຫງ່າລາສີ, ທັນທີທີ່ຫຼັງຈາກພຣະເຈົ້າປະຕິບັດຂັ້ນຕອນພາລະກິດແຫ່ງການຂ້ຽນຕີ, ການທົດລອງແຫ່ງຄວາມຕາຍກໍມາເຖິງ. ໃນພາລະກິດດັ່ງກ່າວ, ມະນຸດໄດ້ເຫັນເຖິງຄວາມໂກດຮ້າຍ, ລິດທານຸພາບ, ການພິພາກສາ ແລະການຂ້ຽນຕີຂອງພຣະເຈົ້າ, ແຕ່ເຂົາກໍຍັງໄດ້ເຫັນພຣະຄຸນຂອງພຣະເຈົ້າ ແລະ ຄວາມຮັກຂອງພຣະອົງ ແລະ ຄວາມເມດຕາເຊັ່ນກັນ; ທຸກສິ່ງທີ່ພຣະເຈົ້າກະທຳ ແລະ ທຸກສິ່ງທີ່ສະແດງອອກເຖິງອຸປະນິໄສຂອງພຣະອົງ ແມ່ນຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດ ແລະ ທຸກສິ່ງທີ່ພຣະເຈົ້າກະທຳແມ່ນເພື່ອເຮັດຕາມຄວາມຕ້ອງການຂອງມະນຸດ. ພຣະອົງກະທຳສິ່ງນັ້ນເພື່ອເຮັດໃຫ້ມະນຸດສົມບູນ ແລະ ພຣະອົງສະໜອງໃຫ້ກັບມະນຸດຕາມວຸດທິພາວະຂອງເຂົາ. ຖ້າພຣະເຈົ້າບໍ່ໄດ້ກະທຳສິ່ງນີ້, ມະນຸດຈະບໍ່ສາມາດມາຢູ່ຕໍ່ໜ້າພຣະເຈົ້າ ແລະ ຈະບໍ່ມີທາງຮູ້ຈັກໃບໜ້າທີ່ແທ້ຈິງຂອງພຣະເຈົ້າໄດ້. ນັບຕັ້ງແຕ່ເວລາທີ່ມະນຸດເລີ່ມເຊື່ອໃນພຣະເຈົ້າເປັນຄັ້ງທຳອິດຈົນເຖິງປັດຈຸບັນ, ພຣະເຈົ້າໄດ້ສະໜອງໃຫ້ກັບມະນຸດເທື່ອລະໜ້ອຍຕາມວຸດທິພາວະຂອງມະນຸດ ເພື່ອວ່າ ມະນຸດຈະໄດ້ມາຮູ້ຈັກພຣະອົງເທື່ອລະໜ້ອຍຢູ່ຂ້າງໃນ. ມີແຕ່ການມາເຖິງປັດຈຸບັນເທົ່ານັ້ນ ມະນຸດຈຶ່ງເຂົ້າໃຈວ່າ ການພິພາກສາຂອງພຣະເຈົ້າມະຫັດສະຈັນສ່ຳໃດ. ບາດກ້າວຂອງພາລະກິດຂອງຜູ້ບໍລິການແມ່ນເຫດການທຳອິດຂອງພາລະກິດແຫ່ງຄຳສາບແຊ່ງຕັ້ງແຕ່ເວລາແຫ່ງການສ້າງຈົນເຖິງປັດຈຸບັນ. ມະນຸດຖືກສາບແຊ່ງໃຫ້ຕົກລົງສູ່ຂຸມເລິກທີ່ສຸດ. ຖ້າພຣະເຈົ້າບໍ່ໄດ້ເຮັດແບບນັ້ນ, ໃນປັດຈຸບັນນີ້ ມະນຸດກໍຈະບໍ່ມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າ; ຜ່ານຄຳສາບແຊ່ງຂອງພຣະເຈົ້າເທົ່ານັ້ນ ມະນຸດຈຶ່ງພົບພໍ້ກັບອຸປະນິໄສຂອງພຣະເຈົ້າຢ່າງເປັນທາງການ. ມະນຸດແມ່ນຖືກເປີດເຜີຍຜ່ານການທົດລອງຂອງຜູ້ບໍລິການ. ເຂົາເຫັນວ່າ ຄວາມຊື່ສັດຂອງເຂົາແມ່ນຍອມຮັບບໍ່ໄດ້, ວຸດທິພາວະຂອງເຂົາກໍຕ່ຳເກີນໄປ, ເຂົາບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ຄຳອ້າງຂອງເຂົາທີ່ວ່າເຮັດໃຫ້ພຣະເຈົ້າພໍໃຈຢູ່ຕະຫຼອດເວລານັ້ນ ກໍເປັນພຽງແຕ່ຄຳເວົ້າ. ເຖິງແມ່ນວ່າໃນບາດກ້າວຂອງພາລະກິດຂອງຜູ້ບໍລິການ ພຣະເຈົ້າສາບແຊ່ງມະນຸດ, ແຕ່ເມື່ອເບິ່ງຄືນແລ້ວ ບາດກ້າວຂອງພາລະກິດຂອງພຣະເຈົ້າແມ່ນມະຫັດສະຈັນ: ມັນນຳຈຸດປ່ຽນແປງທີ່ຍິ່ງໃຫຍ່ມາສູ່ມະນຸດ ແລະເຮັດໃຫ້ມີການປ່ຽນແປງຄັ້ງຍິ່ງໃຫຍ່ຕໍ່ຊີວິດ-ອຸປະນິໄສຂອງເຂົາ. ກ່ອນສະໄໝຂອງຜູ້ບໍລິການ, ມະນຸດບໍ່ເຂົ້າໃຈຫຍັງເລີຍກ່ຽວກັບການສະແຫວງຫາຊີວິດ, ການເຊື່ອໃນພຣະເຈົ້າໝາຍເຖິງຫຍັງ ຫຼື ສະຕິປັນຍາໃນພາລະກິດຂອງພຣະເຈົ້າ ຫຼື ເຂົາບໍ່ເຂົ້າໃຈວ່າ ພາລະກິດຂອງພຣະເຈົ້າສາມາດທົດສອບມະນຸດໄດ້. ນັບຕັ້ງແຕ່ສະໄໝຂອງຜູ້ບໍລິການຕະລອດຈົນເຖິງປັດຈຸບັນ, ມະນຸດເຫັນວ່າ ພາລະກິດຂອງພຣະເຈົ້າມະຫັດສະຈັນສ່ຳໃດ, ມັນເປັນສິ່ງທີ່ມະນຸດບໍ່ສາມາດຢັ່ງເຖິງໄດ້. ມະນຸດບໍ່ສາມາດໃຊ້ສະໝອງຂອງເຂົາຈິນຕະນາການເຖິງວິທີທີ່ພຣະເຈົ້າປະຕິບັດພາລະກິດ ແລະ ເຂົາຍັງເຫັນວ່າວຸດທິພາວະຂອງເຂົາຕ່ຳ

ສໍ່າໃດ ແລະ ມີຫຼາຍຢ່າງໃນຕົວເຂົາທີ່ບໍ່ເຊື່ອຟັງ. ເມື່ອພຣະເຈົ້າສາບແຊ່ງມະນຸດ, ມັນກໍເພື່ອບັນລຸຜົນ ແລະ ພຣະອົງບໍ່ໄດ້ເຮັດໃຫ້ມະນຸດຕາຍ. ເຖິງແມ່ນວ່າພຣະອົງສາບແຊ່ງມະນຸດ, ພຣະອົງກໍເຮັດແບບນັ້ນຜ່ານທາງພຣະທຳ ແລະ ຄຳສາບແຊ່ງຂອງພຣະອົງກໍບໍ່ໄດ້ເກີດຂຶ້ນກັບມະນຸດແທ້ໆ ຍ້ອນສິ່ງທີ່ພຣະເຈົ້າສາບແຊ່ງແມ່ນຄວາມບໍ່ເຊື່ອຟັງຂອງມະນຸດ ແລະ ສະນັ້ນ ພຣະທຳແຫ່ງຄຳສາບແຊ່ງຂອງພຣະອົງແມ່ນເພື່ອເຮັດໃຫ້ມະນຸດສົມບູນເຊັ່ນກັນ. ບໍ່ວ່າພຣະເຈົ້າຈະພິພາກສາມະນຸດ ຫຼື ສາບແຊ່ງເຂົາ, ທັງສອງຢ່າງແມ່ນເຮັດໃຫ້ມະນຸດສົມບູນ: ທັງສອງຢ່າງແມ່ນເຮັດເພື່ອເຮັດໃຫ້ສິ່ງທີ່ບໍ່ບໍລິສຸດຢູ່ພາຍໃນມະນຸດນັ້ນສົມບູນ. ໝາຍຄວາມວ່າ ມະນຸດຖືກຫຼໍ່ຫຼອມຜ່ານສິ່ງນີ້ ແລະ ສິ່ງທີ່ຍັງຂາດຢູ່ຂ້າງໃນມະນຸດກໍຖືກເຮັດໃຫ້ສົມບູນຜ່ານທາງພຣະທຳ ແລະ ພາລະກິດຂອງພຣະອົງ. ທຸກບາດກ້າວຂອງພາລະກິດຂອງພຣະເຈົ້າ ບໍ່ວ່າຈະເປັນພຣະທຳທີ່ໂຫດຮ້າຍ ຫຼື ການພິພາກສາ ຫຼື ການຂ້ຽນຕີແມ່ນເພື່ອເຮັດໃຫ້ມະນຸດສົມບູນ ແລະ ເໝາະສົມທີ່ສຸດ. ພຣະເຈົ້າບໍ່ເຄີຍປະຕິບັດພາລະກິດດັ່ງກ່າວທົ່ວຍຸກຕ່າງໆແບບນີ້; ໃນປັດຈຸບັນ, ພຣະອົງປະຕິບັດພາລະກິດຢູ່ພາຍໃນພວກເຈົ້າ ເພື່ອພວກເຈົ້າຈະເຫັນຄຸນຄ່າເຖິງສະຕິປັນຍາຂອງພຣະອົງ. ເຖິງແມ່ນວ່າພວກເຈົ້າໄດ້ທົນທຸກກັບຄວາມເຈັບປວດບາງຢ່າງພາຍໃນຕົວພວກເຈົ້າ, ຫົວໃຈຂອງພວກເຈົ້າກໍໝັ້ນຄົງ ແລະ ມີຄວາມສະຫງົບສຸກ; ມັນຄືພອນຂອງເຈົ້າທີ່ສາມາດໄດ້ຮັບຈາກຂັ້ນຕອນນີ້ຂອງພາລະກິດຂອງພຣະເຈົ້າ. ບໍ່ວ່າພວກເຈົ້າຈະໄດ້ຮັບຫຍັງກໍຕາມໃນອະນາຄົດ, ທຸກສິ່ງທີ່ພວກເຈົ້າເຫັນກ່ຽວກັບພາລະກິດຂອງພຣະເຈົ້າທີ່ຢູ່ໃນຕົວພວກເຈົ້າໃນປັດຈຸບັນຄືຄວາມຮັກ. ຖ້າມະນຸດບໍ່ໄດ້ຜະເຊີນກັບການພິພາກສາ ແລະ ການຫຼໍ່ຫຼອມຂອງພຣະເຈົ້າ, ການກະທຳ ແລະ ຄວາມຈິງໃຈຂອງເຂົາກໍຈະຍັງຢູ່ໃນລະດັບພາຍນອກສະເໝີ ແລະ ອຸປະນິໄສຂອງເຂົາກໍຈະຍັງຄົງບໍ່ປ່ຽນແປງຢູ່ສະເໝີ. ສິ່ງນີ້ຖືວ່າເປັນການຖືກຮັບເອົາໂດຍພຣະເຈົ້າບໍ? ໃນປັດຈຸບັນ, ເຖິງແມ່ນວ່າຍັງມີຫຼາຍຢ່າງພາຍໃນມະນຸດທີ່ຍັງອວດດີ ແລະ ທະນົງຕົວ, ອຸປະນິໄສຂອງມະນຸດກໍໝັ້ນຄົງກວ່າແຕ່ກ່ອນຫຼາຍ. ການທີ່ພຣະເຈົ້າຈັດການກັບເຈົ້າກໍແມ່ນເພື່ອຊ່ວຍເຈົ້າໃຫ້ລອດພົ້ນ ແລະ ເຖິງແມ່ນວ່າເຈົ້າອາດຮູ້ສຶກເຈັບປວດບາງຢ່າງໃນເວລານັ້ນ, ມື້ທີ່ເກີດມີການປ່ຽນແປງໃນອຸປະນິໄສຂອງເຈົ້າກໍຈະມາເຖິງ. ໃນເວລານັ້ນ, ເຈົ້າຈະຫຼຽວຄືນຫຼັງ ແລະ ເຫັນວ່າພາລະກິດຂອງພຣະເຈົ້າມີສະຕິປັນຍາຫຼາຍສໍ່າໃດ ແລະ ໃນເວລານັ້ນເຈົ້າກໍຈະສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ. ໃນປັດຈຸບັນ, ມີບາງຄົນທີ່ເວົ້າວ່າ ພວກເຂົາເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ແຕ່ສິ່ງນັ້ນແມ່ນບໍ່ເປັນຈິງເລີຍ. ແທ້ຈິງແລ້ວ, ພວກເຂົາກຳລັງເວົ້າໃນສິ່ງທີ່ບໍ່ເປັນຈິງ ເພາະໃນປັດຈຸບັນ ພວກເຂົາຍັງບໍ່ເຂົ້າໃຈວ່າ ຄວາມປະສົງຂອງພຣະເຈົ້າແມ່ນການຊ່ວຍມະນຸດ ຫຼື ສາບແຊ່ງມະນຸດ. ບາງເທື່ອ ເຈົ້າບໍ່ສາມາດເຫັນຢ່າງຊັດເຈນໃນຕອນນີ້, ແຕ່ມື້ນັ້ນຈະມາເຖິງ ເມື່ອເຈົ້າເຫັນວ່າ ມື້ທີ່ພຣະເຈົ້າໄດ້ຮັບສະຫງ່າລາສີໄດ້ມາຮອດແລ້ວ ແລະ ເຈົ້າຈະເຫັນວ່າ ການຮັກພຣະເຈົ້າມີຄວາມໝາຍຫຼາຍສໍ່າໃດ, ເພື່ອເຈົ້າຈະຮຽນຮູ້ຈັກຊີວິດມະນຸດ ແລະ ເນື້ອໜັງຂອງເຈົ້າຈະດຳລົງຢູ່ໃນໂລກແຫ່ງການຮັກພຣະເຈົ້າ, ເພື່ອວ່າວິນຍານຂອງເຈົ້າຈະຖືກປ່ອຍໃຫ້ເປັນອິດສະຫຼະ, ຊີວິດຂອງເຈົ້າຈະເຕັມໄປດ້ວຍຄວາມປິຕິຍິນດີ ແລະ ເຈົ້າຈະໄດ້ຢູ່ໃກ້ຊິດກັບພຣະເຈົ້າສະເໝີ ແລະ ຈະເພິ່ງພາພຣະເຈົ້າຢູ່ສະເໝີ. ໃນເວລານັ້ນ, ເຈົ້າຈະຮູ້ຈັກຢ່າງແທ້ຈິງວ່າ ພາລະກິດຂອງພຣະເຈົ້າໃນປັດຈຸບັນແມ່ນມີຄ່າຫຼາຍສໍ່າໃດ.

ໃນປັດຈຸບັນນີ້, ຄົນສ່ວນໃຫຍ່ບໍ່ມີຄວາມຮູ້ແບບນັ້ນ. ພວກເຂົາເຊື່ອວ່າ ການທົນທຸກແມ່ນບໍ່ມີຄຸນຄ່າ, ພວກເຂົາຖືກໂລກປະຖິ້ມ, ຊີວິດໃນເຮືອນຂອງພວກເຂົາກໍມີບັນຫາ, ພວກເຂົາບໍ່ເປັນທີ່ຮັກຂອງພຣະເຈົ້າ ແລະ ຄວາມຄາດຫວັງຂອງພວກເຂົາກໍວ່າງເປົ່າ. ການທົນທຸກຂອງບາງຄົນໄປເຖິງຈຸດສູງສຸດ ແລະ ຄວາມຄິດຂອງພວກເຂົາກໍຄິດເຖິງແຕ່ຄວາມຕາຍ. ນີ້ບໍ່ແມ່ນການຮັກພຣະເຈົ້າທີ່ແທ້ຈິງ; ຄົນປະເພດດັ່ງກ່າວແມ່ນຄົນຂີ້ຢ້ານ, ພວກເຂົາບໍ່ມີຄວາມບາກບັ່ນ, ພວກເຂົາອ່ອນແອ ແລະ ບໍ່ມີພະລັງ! ພຣະເຈົ້າຮ້ອນຮົນທີ່ຈະໃຫ້ມະນຸດຮັກພຣະອົງ, ແຕ່ວ່າຍິ່ງມະນຸດຮັກພຣະອົງຫຼາຍສໍ່າໃດ, ການທົນທຸກຂອງມະນຸດກໍຍິ່ງຫຼາຍສໍ່ານັ້ນ ແລະ ຍິ່ງມະນຸດຮັກພຣະອົງຫຼາຍສໍ່າໃດ, ການທົດລອງຂອງມະນຸດກໍຍິ່ງຫຼາຍສໍ່ານັ້ນ. ຖ້າເຈົ້າຮັກພຣະອົງ, ແລ້ວການທົນທຸກທຸກຮູບແບບຈະເກີດຂຶ້ນກັບເຈົ້າ ແລະ ຖ້າເຈົ້າບໍ່ໄດ້ຮັກພຣະອົງ, ແລ້ວບາງເທື່ອ ທຸກສິ່ງຈະດໍາເນີນໄປຢ່າງລາບລື້ນສໍາລັບເຈົ້າ ແລະ ທຸກສິ່ງທີ່ຢູ່ອ້ອມຂ້າງເຈົ້າກໍຈະສະຫງົບສຸກ. ເມື່ອເຈົ້າຮັກພຣະເຈົ້າ, ເຈົ້າຈະຮູ້ສຶກວ່າ ຫຼາຍສິ່ງທີ່ຢູ່ອ້ອມຂ້າງເຈົ້າແມ່ນບໍ່ສາມາດຜ່ານພົ້ນໄປໄດ້ ແລະ ຍ້ອນວ່າວຸດທິພາວະຂອງເຈົ້າຕໍ່າເກີນໄປ ເຈົ້າຈະຖືກຫຼໍ່ຫຼອມ; ຍິ່ງໄປກວ່ານັ້ນ, ເຈົ້າຈະບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈ ແລະ ເຈົ້າຈະຮູ້ສຶກຢູ່ສະເໝີວ່າ ຄວາມປະສົງຂອງພຣະເຈົ້າສູງສົ່ງເກີນໄປ, ມັນຢູ່ເໜືອທີ່ມະນຸດຈະເອື້ອມເຖິງໄດ້. ຍ້ອນທຸກສິ່ງເຫຼົ່ານີ້ ເຈົ້າຈຶ່ງຈະຖືກຫຼໍ່ຫຼອມ; ຍ້ອນວ່າມີຄວາມອ່ອນແອຫຼາຍຢ່າງພາຍໃນຕົວເຈົ້າ ແລະ ມີຫຼາຍສິ່ງທີ່ບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້, ເຈົ້າຈຶ່ງຈະຖືກຫຼໍ່ຫຼອມຢູ່ຂ້າງໃນ. ແຕ່ພວກເຈົ້າຕ້ອງເຫັນຢ່າງຊັດເຈນວ່າ ການຊໍາລະລ້າງໃຫ້ບໍລິສຸດນັ້ນແມ່ນຖືກບັນລຸຜົນຜ່ານການຫຼໍ່ຫຼອມເທົ່ານັ້ນ. ສະນັ້ນໃນລະຫວ່າງຍຸກສຸດທ້າຍນີ້ ພວກເຈົ້າຕ້ອງເປັນພະຍານໃຫ້ກັບພຣະເຈົ້າ. ບໍ່ວ່າການທົນທຸກຂອງພວກເຈົ້າຈະຍິ່ງໃຫຍ່ສໍ່າໃດກໍຕາມ, ພວກເຈົ້າຄວນດໍາເນີນຕໍ່ໄປຈົນເຖິງເວລາສຸດທ້າຍແທ້ໆ ແລະ ແມ່ນແຕ່ໃນລົມຫາຍໃຈສຸດທ້າຍຂອງເຈົ້າເອງ, ເຈົ້າຍັງຕ້ອງຊື່ສັດກັບພຣະເຈົ້າ ແລະ ຍອມຢູ່ພາຍໃຕ້ການປັ້ນແຕ່ງຂອງພຣະເຈົ້າ; ມີພຽງສິ່ງນີ້ເທົ່ານັ້ນທີ່ເປັນການຮັກພຣະເຈົ້າຢ່າງແທ້ຈິງ ແລະ ມີພຽງສິ່ງນີ້ເທົ່ານັ້ນທີ່ເປັນຄໍາພະຍານທີ່ໝັ້ນຄົງ ແລະ ກຶກກ້ອງ. ເມື່ອເຈົ້າຖືກຊາຕານລໍ້ລວງ, ເຈົ້າຄວນເວົ້າວ່າ "ຫົວໃຈຂອງເຮົາເປັນຂອງພຣະເຈົ້າ ແລະ ພຣະເຈົ້າໄດ້ຮັບເອົາເຮົາແລ້ວ. ເຮົາບໍ່ສາມາດເຮັດໃຫ້ເຈົ້າພໍໃຈໄດ້ ເພາະເຮົາຕ້ອງອຸທິດທຸກຢ່າງຂອງເຮົາເພື່ອເຮັດໃຫ້ພຣະເຈົ້າພໍໃຈ". ຍິ່ງເຈົ້າເຮັດໃຫ້ພຣະເຈົ້າພໍໃຈຫຼາຍສໍ່າໃດ, ພຣະເຈົ້າຈະຍິ່ງອວຍພອນເຈົ້າຫຼາຍສໍ່ານັ້ນ ແລະ ຍິ່ງຄວາມຮັກທີ່ເຈົ້າມີໃຫ້ກັບພຣະເຈົ້ານັ້ນຍິ່ງໃຫຍ່ສໍ່າໃດ; ເຈົ້າກໍຍິ່ງຈະມີຄວາມເຊື່ອ ແລະ ຄວາມເດັດດ່ຽວຫຼາຍສໍ່ານັ້ນເຊັ່ນກັນ ແລະ ຈະຮູ້ສຶກວ່າ ບໍ່ມີຫຍັງທີ່ມີຄຸນຄ່າ ຫຼື ສໍາຄັນໄປກວ່າການໃຊ້ຊີວິດເພື່ອຮັກພຣະເຈົ້າ. ສາມາດເວົ້າໄດ້ວ່າ ຕາບໃດທີ່ມະນຸດຮັກພຣະເຈົ້າກໍຈະປາສະຈາກຄວາມໂສກເສົ້າ. ເຖິງແມ່ນວ່າບາງຄັ້ງເນື້ອໜັງຂອງເຈົ້າອ່ອນແອ ແລະ ເຈົ້າເຕັມໄປດ້ວຍບັນຫາແທ້ຈິງຫຼາຍຢ່າງ, ໃນລະຫວ່າງເວລານີ້ ເຈົ້າຈະເພິ່ງພາພຣະເຈົ້າຢ່າງແທ້ຈິງ ແລະ ເຈົ້າຈະສະບາຍໃຈຂຶ້ນໃນຈິດໃຈຂອງເຈົ້າ ແລະ ເຈົ້າຈະຮູ້ສຶກໝັ້ນໃຈທີ່ເຈົ້າມີບາງສິ່ງທີ່ເພິ່ງພາໄດ້. ດ້ວຍວິທີນີ້, ເຈົ້າຈະສາມາດເອົາຊະນະສະພາບແວດລ້ອມຫຼາຍຢ່າງ ແລະ ດ້ວຍເຫດນັ້ນ ເຈົ້າກໍຈະບໍ່ຕໍ່ວ່າພຣະເຈົ້າຍ້ອນຄວາມທຸກທໍລະມານໃຈທີ່ເຈົ້າໄດ້ຮັບອີກ. ກົງກັນຂ້າມ ເຈົ້າຈະ

ຢາກຮ້ອງເພງ, ເຕັ້ນລຳ ແລະ ອະທິຖານ, ຊຸມນຸມ ແລະ ສົນທະນາ, ຄຳນຶງເຖິງພຣະເຈົ້າ ແລະ ເຈົ້າຈະຮູ້ສຶກວ່າ ທຸກຄົນ, ທຸກບັນຫາ ແລະ ທຸກສິ່ງທີ່ຢູ່ອ້ອມຂ້າງເຈົ້າທີ່ພຣະເຈົ້າຈັດຕັ້ງຂຶ້ນແມ່ນເໝາະສົມແລ້ວ. ຖ້າເຈົ້າບໍ່ຮັກພຣະເຈົ້າ, ທຸກສິ່ງທີ່ເຈົ້າເຜິ່ງພາຈະເປັນຕາລຳຄານສຳລັບເຈົ້າ, ໃນສາຍຕາເຈົ້າຈະບໍ່ມີຫຍັງເປັນທີ່ພໍໃຈ; ເຈົ້າຈະບໍ່ເປັນອິດສະຫຼະໃນຈິດວິນຍານຂອງເຈົ້າ ແຕ່ຈະຖືກບີບບັງຄັບ, ຫົວໃຈຂອງເຈົ້າຈະຕໍ່ວ່າພຣະເຈົ້າຢູ່ສະເໝີ ແລະ ເຈົ້າຈະຮູ້ສຶກຢູ່ສະເໝີວ່າ ເຈົ້າທົນທຸກກັບຄວາມທໍລະມານຫຼາຍຢ່າງ ແລະ ມັນບໍ່ຍຸຕິທຳເລີຍ. ຖ້າເຈົ້າບໍ່ສະແຫວງຫາເພື່ອເຫັນແກ່ຄວາມສຸກ, ແຕ່ເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ບໍ່ຖືກຊາຕານກ່າວໂທດ, ແລ້ວການສະແຫວງຫາດັ່ງກ່າວຈະສ້າງພະລັງທີ່ຍິ່ງໃຫຍ່ໃຫ້ເຈົ້າໄດ້ຮັກພຣະເຈົ້າ. ມະນຸດສາມາດປະຕິບັດທຸກສິ່ງທີ່ພຣະເຈົ້າກ່າວໄວ້ ແລະ ທຸກສິ່ງທີ່ເຂົາເຮັດກໍສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້, ນີ້ແມ່ນຄວາມໝາຍຂອງການມີຄວາມຈິງ. ການສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າພໍໃຈແມ່ນການໃຊ້ຄວາມຮັກສຳລັບພຣະເຈົ້າເພື່ອນຳພຣະທຳຂອງພຣະອົງເຂົ້າສູ່ການປະຕິບັດ; ບໍ່ວ່າເວລາໃດກໍຕາມ ແມ່ນແຕ່ເມື່ອຄົນອື່ນບໍ່ມີກຳລັງ ເຈົ້າກໍຈະຍັງມີຫົວໃຈທີ່ຮັກພຣະເຈົ້າຢູ່ພາຍໃນເຈົ້າ ເຊິ່ງປາຖະໜາຫາພຣະເຈົ້າຢ່າງເລິກເຊິ່ງ ແລະ ຄິດຮອດພຣະເຈົ້າຢູ່ສະເໝີ. ນີ້ແມ່ນວຸດທິພາວະທີ່ເປັນຈິງ. ວຸດທິພາວະຂອງເຈົ້າຈະສູງສໍ່າໃດແມ່ນຂຶ້ນກັບວ່າ ຄວາມຮັກທີ່ເຈົ້າມີໃຫ້ກັບພຣະເຈົ້ານັ້ນຍິ່ງໃຫຍ່ສໍ່າໃດ, ຂຶ້ນກັບວ່າເຈົ້າສາມາດຍຶດໝັ້ນໃນເວລາທີ່ຖືກທົດສອບ ຫຼື ບໍ່, ເຈົ້າອ່ອນແອໃນເວລາທີ່ສະພາບແວດລ້ອມໃດໜຶ່ງເກີດຂຶ້ນກັບເຈົ້າ ຫຼື ບໍ່ ແລະ ເຈົ້າສາມາດຍຶດໝັ້ນໃນຈຸດຢືນຂອງເຈົ້າໃນເວລາທີ່ອ້າຍເອື້ອຍນ້ອງຂອງເຈົ້າປະຕິເສດເຈົ້າ ຫຼື ບໍ່; ການມາເຖິງຂອງຄວາມຈິງຕ່າງໆຈະສະແດງໃຫ້ເຫັນວ່າ ຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າເປັນແນວໃດ. ສາມາດເຫັນໄດ້ຈາກພາລະກິດຫຼາຍຢ່າງຂອງພຣະເຈົ້າວ່າ ພຣະເຈົ້າແມ່ນຮັກມະນຸດແທ້ຈິງ, ເຖິງແມ່ນວ່າຕາຝ່າຍວິນຍານຂອງມະນຸດຍັງບໍ່ທັນຖືກເປີດອອກຢ່າງສົມບູນ ແລະ ເຂົາບໍ່ສາມາດເບິ່ງຜ່ານພາລະກິດຫຼາຍຢ່າງຂອງພຣະເຈົ້າ ແລະ ຄວາມປະສົງຂອງພຣະເຈົ້າ ແລະ ຫຼາຍໆສິ່ງທີ່ເປັນຕາຮັກກ່ຽວກັບພຣະເຈົ້າ; ມະນຸດມີຄວາມຮັກທີ່ແທ້ຈິງຕໍ່ພຣະເຈົ້າພຽງເລັກນ້ອຍ. ເຈົ້າເຊື່ອໃນພຣະເຈົ້າຕະຫຼອດເວລາທີ່ຜ່ານມາ ແລະ ໃນປັດຈຸບັນ ພຣະເຈົ້າໄດ້ຕັດການຫຼົບໜີທຸກຮູບແບບ. ເວົ້າຕາມຄວາມເປັນຈິງກໍຄື ເຈົ້າບໍ່ມີທາງເລືອກ ນອກຈາກຈະເລືອກເສັ້ນທາງທີ່ຖືກຕ້ອງ, ເສັ້ນທາງທີ່ຖືກຕ້ອງ ທີ່ເຈົ້າຖືກນຳພາໂດຍການພິພາກສາທີ່ໂຫດຮ້າຍ ແລະ ຄວາມລອດພົ້ນສູງສຸດຂອງພຣະເຈົ້າ. ຫຼັງຈາກການຜະເຊີນກັບຄວາມລຳບາກ ແລະ ການຫຼໍ່ຫຼອມເທົ່ານັ້ນ ມະນຸດຈຶ່ງຮູ້ຈັກວ່າ ພຣະເຈົ້າເປັນຕາຮັກ. ເມື່ອໄດ້ຜະເຊີນຈົນມາຮອດປັດຈຸບັນນີ້, ສາມາດເວົ້າໄດ້ວ່າ ມະນຸດໄດ້ຮຽນຮູ້ສ່ວນໜຶ່ງຂອງຄວາມເປັນຕາຮັກຂອງພຣະເຈົ້າ, ແຕ່ສິ່ງນີ້ກໍຍັງບໍ່ພຽງພໍ, ເພາະມະນຸດຂາດເຂີນຫຼາຍ. ມະນຸດຕ້ອງຜະເຊີນກັບພາລະກິດທີ່ມະຫັດສະຈັນຂອງພຣະເຈົ້າຫຼາຍຂຶ້ນ ແລະ ການຫຼໍ່ຫຼອມທຸກຢ່າງຈາກການທົນທຸກທີ່ຈັດແຈງໂດຍພຣະເຈົ້າຫຼາຍຂຶ້ນ. ມີແຕ່ເມື່ອນັ້ນ ຊີວິດ-ອຸປະນິໄສຂອງມະນຸດຈຶ່ງຈະສາມາດໄດ້ຮັບການປ່ຽນແປງ.

# ມີພຽງແຕ່ການຮັກພຣະເຈົ້າເທົ່ານັ້ນ ທີ່ເປັນການເຊື່ອໃນພຣະເຈົ້າຢ່າງແທ້ຈິງ

ໃນປັດຈຸບັນ, ເມື່ອພວກເຈົ້າສະແຫວງຫາທີ່ຈະຮັກ ແລະ ຮູ້ຈັກພຣະເຈົ້າ, ໃນດ້ານໜຶ່ງ ພວກເຈົ້າຕ້ອງອົດກັ້ນຕໍ່ຄວາມຍາກລຳບາກ ແລະ ການຫຼໍ່ຫຼອມ ແລະ ໃນອີກດ້ານໜຶ່ງ ພວກເຈົ້າຕ້ອງຍອມເສຍສະຫຼະ. ບໍ່ມີບົດຮຽນໃດທີ່ເລິກເຊິ່ງໄປກວ່າບົດຮຽນແຫ່ງການຮັກພຣະເຈົ້າ ແລະ ສາມາດເວົ້າໄດ້ວ່າບົດຮຽນທີ່ຜູ້ຄົນຮຽນຮູ້ຊົ່ວຊີວິດກ່ຽວກັບຄວາມເຊື່ອແມ່ນວິທີການຮັກພຣະເຈົ້າ. ນັ້ນໝາຍຄວາມວ່າຖ້າເຈົ້າເຊື່ອໃນພຣະເຈົ້າ ເຈົ້າກໍຕ້ອງຮັກພຣະເຈົ້າ. ຖ້າເຈົ້າພຽງແຕ່ເຊື່ອໃນພຣະເຈົ້າ ແຕ່ບໍ່ໄດ້ຮັກພຣະອົງ ແລະ ບໍ່ໄດ້ຮັບຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ບໍ່ເຄີຍໄດ້ຮັກພຣະເຈົ້າດ້ວຍຄວາມຮັກທີ່ແທ້ຈິງເຊິ່ງມາຈາກພາຍໃນຫົວໃຈຂອງເຈົ້າຈັກເທື່ອ, ແລ້ວຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າກໍບໍ່ມີປະໂຫຍດຫຍັງ; ໃນຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້ານັ້ນ ຖ້າເຈົ້າບໍ່ຮັກພຣະເຈົ້າ ແລ້ວເຈົ້າກໍດຳລົງຊີວິດຢ່າງໄຮ້ຄ່າ ແລະ ຊີວິດທັງໝົດຂອງເຈົ້າກໍຕໍ່າຕ້ອຍທີ່ສຸດໃນບັນດາຊີວິດທັງປວງ. ຕະຫຼອດທັງຊີວິດຂອງເຈົ້າ ຖ້າເຈົ້າບໍ່ເຄີຍຮັກ ຫຼື ເຮັດໃຫ້ພຣະເຈົ້າພໍພຣະໄທເລີຍ, ແລ້ວແມ່ນຫຍັງຄືຄວາມໝາຍໃນການດຳລົງຊີວິດຂອງເຈົ້າ? ແລ້ວແມ່ນຫຍັງຄືຄວາມໝາຍຂອງຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າ? ນັ້ນບໍ່ແມ່ນຄວາມພະຍາຍາມທີ່ສູນເປົ່າບໍ? ນີ້ໝາຍຄວາມວ່າ ຖ້າຜູ້ຄົນຕ້ອງເຊື່ອ ແລະ ຮັກພຣະເຈົ້າ, ແລ້ວພວກເຂົາຕ້ອງຍອມເສຍສະຫຼະ. ແທນທີ່ຈະພະຍາຍາມປະພຶດໃນລັກສະນະໃດໜຶ່ງດ້ານພາຍນອກ, ພວກເຂົາຄວນສະແຫວງຫາຄວາມເຂົ້າໃຈທີ່ແທ້ຈິງໃນສ່ວນເລິກຂອງຫົວໃຈຂອງພວກເຂົາ. ຖ້າເຈົ້າກະຕືລືລົ້ນໃນການຮ້ອງເພງ ແລະ ເຕັ້ນລຳ, ແຕ່ບໍ່ສາມາດນຳຄວາມຈິງເຂົ້າສູ່ການປະຕິບັດຕົວຈິງ, ຈະສາມາດເວົ້າໄດ້ບໍວ່າ ເຈົ້າຮັກພຣະເຈົ້າ? ການຮັກພຣະເຈົ້າຕ້ອງການໆສະແຫວງຫາຄວາມປະສົງຂອງພຣະເຈົ້າໃນທຸກສິ່ງທຸກຢ່າງ ແລະ ເຈົ້າຕ້ອງສືບສວນຢ່າງເລິກເຊິ່ງຢູ່ພາຍໃນ ເມື່ອມີສິ່ງໃດກໍຕາມເກີດຂຶ້ນກັບເຈົ້າ, ພະຍາຍາມທີ່ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ພະຍາຍາມທີ່ຈະເຫັນວ່າ ແມ່ນຫຍັງຄືຄວາມປະສົງຂອງພຣະເຈົ້າໃນບັນຫາຕ່າງໆ, ພຣະອົງຮຽກຮ້ອງທີ່ຈະໃຫ້ເຈົ້າບັນລຸຫຍັງ ແລະ ເຈົ້າຄວນຕັ້ງໃຈແນວໃດກ່ຽວກັບຄວາມປະສົງຂອງພຣະອົງ. ຕົວຢ່າງຄື: ບາງສິ່ງບາງຢ່າງເກີດຂຶ້ນ ໂດຍຮຽກຮ້ອງໃຫ້ເຈົ້າອົດກັ້ນຕໍ່ຄວາມຍາກລຳບາກ ໃນເວລາທີ່ເຈົ້າຄວນເຂົ້າໃຈວ່າ ຄວາມປະສົງຂອງພຣະເຈົ້າແມ່ນຫຍັງ ແລະ ເຈົ້າຄວນໃສ່ໃຈແນວໃດກ່ຽວກັບຄວາມປະສົງຂອງພຣະອົງ. ເຈົ້າບໍ່ຕ້ອງເຮັດໃຫ້ຕົວເຈົ້າເອງພໍໃຈ ນັ້ນກໍຄື ໃຫ້ປະຖິ້ມຕົວເຈົ້າເອງໄວ້. ບໍ່ມີຫຍັງທີ່ເປັນຕາສັງເວດຫຼາຍກວ່າເນື້ອໜັງ. ເຈົ້າຕ້ອງສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ຕ້ອງປະຕິບັດໜ້າທີ່ຂອງເຈົ້າ. ດ້ວຍຄວາມຄິດດັ່ງກ່າວ, ພຣະເຈົ້າຈະນຳແສງສະຫວ່າງທີ່ພິເສດມາໃຫ້ເຈົ້າໃນບັນຫານີ້ ແລະ ຫົວໃຈຂອງເຈົ້າກໍຈະຄົ້ນພົບຄວາມສຸກສະບາຍ. ບໍ່ວ່າຈະໃຫຍ່ ຫຼື ນ້ອຍ, ເມື່ອບາງສິ່ງບາງຢ່າງເກີດຂຶ້ນກັບເຈົ້າ, ເຈົ້າຕ້ອງປະຖິ້ມຕົວເຈົ້າເອງໄວ້ ແລະ ເບິ່ງເນື້ອໜັງເປັນສິ່ງທີ່ຕໍ່າຕ້ອຍທີ່ສຸດໃນບັນດາທຸກສິ່ງທຸກຢ່າງ. ຍິ່ງເຈົ້າເຮັດໃຫ້ເນື້ອໜັງພໍໃຈສໍ່າໃດ ມັນກໍຈະມີອິດສະຫຼະຫຼາຍສໍ່ານັ້ນ; ຖ້າເຈົ້າເຮັດໃຫ້ເນື້ອໜັງພໍໃຈໃນເວລານີ້ ຄັ້ງຕໍ່ໄປ ມັນກໍ

ຈະຮຽກຮ້ອງຫຼາຍຂຶ້ນຕື່ມ ເມື່ອສືບຕໍ່ເປັນແບບນີ້, ຜູ້ຄົນກໍຈະຮັກເນື້ອໜັງຫຼາຍຍິ່ງຂຶ້ນ. ເນື້ອໜັງມີຄວາມປາຖະໜາຫຼາຍເກີນຂອບເຂດຢູ່ສະເໝີ; ມັນຮຽກຮ້ອງໃຫ້ເຈົ້າເຮັດໃຫ້ມັນພໍໃຈຢູ່ຕະຫຼອດເວລາ ແລະ ໃຫ້ເຈົ້າສະໜອງຄວາມຕ້ອງການໃຫ້ກັບມັນຢູ່ພາຍໃນ, ບໍ່ວ່າຈະເປັນສິ່ງທີ່ເຈົ້າກິນ, ສິ່ງທີ່ເຈົ້ານຸ່ງ ຫຼື ໃນການສູນເສຍອາລົມຂອງເຈົ້າ ຫຼື ຍອມຕາມຄວາມອ່ອນແອ ແລະ ຄວາມຂີ້ຄ້ານຂອງເຈົ້າເອງ... ຍິ່ງເຈົ້າເຮັດໃຫ້ເນື້ອໜັງພໍໃຈຫຼາຍສໍ່າໃດ, ຄວາມປາຖະໜາຂອງມັນກໍຈະຍິ່ງເພີ່ມຂຶ້ນຫຼາຍສໍ່ານັ້ນ ແລະ ເນື້ອໜັງກໍຍິ່ງເສື່ອມຊາມຫຼາຍສໍ່ານັ້ນ ຈົນເຖິງຈຸດທີ່ວ່າ ເນື້ອໜັງຂອງມະນຸດເຊື່ອງຄວາມຄິດທີ່ເລິກເຊິ່ງຫຼາຍກວ່າເກົ່າ ແລະ ບໍ່ເຊື່ອຟັງພຣະເຈົ້າ ແລະ ສັນລະເສີນຕົວມັນເອງ ແລະ ສົງໄສກ່ຽວກັບພາລະກິດຂອງພຣະເຈົ້າ. ຍິ່ງເຈົ້າເຮັດໃຫ້ເນື້ອໜັງພໍໃຈຫຼາຍສໍ່າໃດ, ຄວາມອ່ອນແອຂອງເນື້ອໜັງກໍຈະຍິ່ງເພີ່ມຂຶ້ນຫຼາຍສໍ່ານັ້ນ; ເຈົ້າຈະຮູ້ສຶກຢູ່ສະເໝີວ່າ ບໍ່ມີໃຜເຫັນອົກເຫັນໃຈກັບຄວາມອ່ອນແອຂອງເຈົ້າເລີຍ, ເຈົ້າຈະເຊື່ອຢູ່ສະເໝີວ່າ ພຣະເຈົ້າເຮັດຫຼາຍເກີນໄປ ແລະ ເຈົ້າຈະເວົ້າວ່າ "ພຣະເຈົ້າໂຫດຮ້າຍແບບນີ້ໄດ້ແນວໃດ? ເປັນຫຍັງພຣະອົງຈຶ່ງບໍ່ປ່ອຍໃຫ້ຜູ້ຄົນພັກຜ່ອນແດ່?" ເມື່ອຜູ້ຄົນເພິ່ງພໍໃຈເນື້ອໜັງ ແລະ ຖະໜອມມັນຫຼາຍເກີນໄປ, ແລ້ວພວກເຂົາກໍທຳລາຍຕົວພວກເຂົາເອງ. ຖ້າເຈົ້າຮັກພຣະເຈົ້າຢ່າງແທ້ຈິງ ແລະ ບໍ່ເຮັດໃຫ້ເນື້ອໜັງພໍໃຈ, ແລ້ວເຈົ້າກໍຈະເຫັນວ່າ ທຸກສິ່ງທີ່ພຣະເຈົ້າກະທຳແມ່ນຖືກຕ້ອງຫຼາຍ ແລະ ດີຫຼາຍ ແລະ ການທີ່ພຣະອົງສາບແຊ່ງຄວາມກະບົດຂອງເຈົ້າ ແລະ ພິພາກສາຄວາມບໍ່ຊອບທຳຂອງເຈົ້າກໍຖືກຕ້ອງແລ້ວ. ຈະມີຊ່ວງເວລາທີ່ພຣະເຈົ້າຕີສອນ ແລະ ລົງວິໄນກັບເຈົ້າ ແລະ ຍົກສະພາບແວດລ້ອມຂຶ້ນເພື່ອເຮັດໃຫ້ເຈົ້າເຂັ້ມແຂງໂດຍບັງຄັບໃຫ້ເຈົ້າມາຢູ່ຕໍ່ໜ້າພຣະອົງ ແລະ ເຈົ້າກໍຈະຮູ້ສຶກຢູ່ສະເໝີວ່າ ສິ່ງທີ່ພຣະເຈົ້າກຳລັງກະທຳນັ້ນເປັນສິ່ງທີ່ມະຫັດສະຈັນ. ສະນັ້ນ ເຈົ້າຈະຮູ້ສຶກຄືກັບວ່າ ບໍ່ມີຄວາມເຈັບປວດຫຼາຍ ແລະ ພຣະເຈົ້າກໍເປັນຕາຮັກຫຼາຍ. ຖ້າເຈົ້າຍອມຕາມຄວາມອ່ອນແອຂອງເນື້ອໜັງ ແລະ ເວົ້າວ່າ ພຣະເຈົ້າເຮັດຫຼາຍເກີນໄປ ແລ້ວເຈົ້າກໍຈະຮູ້ສຶກເຈັບປວດ ແລະ ເສົ້າໃຈຢູ່ຕະຫຼອດເວລາ ແລະ ເຈົ້າກໍຈະບໍ່ຊັດເຈນກ່ຽວກັບພາລະກິດທັງໝົດຂອງພຣະເຈົ້າ ແລະ ຈະເບິ່ງຄືກັບວ່າພຣະເຈົ້າບໍ່ມີຄວາມເຫັນອົກເຫັນໃຈຕໍ່ຄວາມອ່ອນແອຂອງມະນຸດເລີຍ ແລະ ບໍ່ຮັບຮູ້ເຖິງຄວາມຫຍຸ້ງຍາກຂອງມະນຸດ. ແລ້ວດ້ວຍເຫດນັ້ນ ເຈົ້າຈຶ່ງຮູ້ສຶກໂສກເສົ້າຫຼາຍ ແລະ ໂດດດ່ຽວຢູ່ສະເໝີ ເໝືອນກັບວ່າເຈົ້າໄດ້ທົນທຸກກັບຄວາມບໍ່ຍຸຕິທຳຫຼາຍແທ້ໆ ແລະ ໃນຊ່ວງເວລານີ້ ເຈົ້າກໍຈະເລີ່ມຕໍ່ວ່າ. ຍິ່ງເຈົ້າຍອມຕາມຄວາມອ່ອນແອຂອງເນື້ອໜັງໃນລັກສະນະນີ້ຫຼາຍສໍ່າໃດ ເຈົ້າກໍຈະຮູ້ສຶກວ່າ ພຣະເຈົ້າເຮັດເກີນໄປຫຼາຍສໍ່ານັ້ນ, ເຮັດເກີນໄປຈົນເຈົ້າປະຕິເສດພາລະກິດຂອງພຣະເຈົ້າ ແລະ ເລີ່ມຕໍ່ຕ້ານພຣະເຈົ້າ ແລະ ເຕັມໄປດ້ວຍຄວາມບໍ່ເຊື່ອຟັງ. ສະນັ້ນ, ເຈົ້າຕ້ອງຂັດຂືນເນື້ອໜັງ ແລະ ບໍ່ຍອມຕາມໃຈມັນ ໂດຍເວົ້າວ່າ "ສາມີ (ພັນລະຍາ) ຂອງຂ້ານ້ອຍ, ລູກໆ, ໂອກາດ, ການແຕ່ງງານ, ຄອບຄົວຂອງຂ້ານ້ອຍ, ບໍ່ມີຫຍັງທີ່ສຳຄັນເລີຍ! ໃນຫົວໃຈຂອງຂ້ານ້ອຍ ມີພຽງແຕ່ພຣະເຈົ້າເທົ່ານັ້ນ ແລະ ຂ້ານ້ອຍຕ້ອງພະຍາຍາມຢ່າງສຸດຄວາມສາມາດເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ບໍ່ເຮັດໃຫ້ເນື້ອໜັງພໍໃຈ". ເຈົ້າຕ້ອງມີຄວາມຕັ້ງໃຈແບບນີ້. ຖ້າເຈົ້າມີຄວາມຕັ້ງໃຈແບບນີ້ຢູ່ສະເໝີ ແລ້ວເມື່ອເຈົ້ານຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ປະຖິ້ມຕົວເຈົ້າເອງ, ເຈົ້າຈຶ່ງຈະສາມາດກະທຳສິ່ງດັ່ງກ່າວພຽງໃຊ້ຄວາມພະຍາຍາມ

ເລັກນ້ອຍ. ມີເລື່ອງເລົ່າທີ່ວ່າ ກາລະຄັ້ງໜຶ່ງ ໄດ້ມີຊາວນາຄົນໜຶ່ງເຫັນງູທີ່ແຂງກະດ້າງຍ້ອນຄວາມໜາວໃນຫົນທາງ. ຊາວນາຄົນນັ້ນຈຶ່ງຈັບມັນຂຶ້ນມາ ແລ້ວຖືມັນໄວ້ໃກ້ກັບເອິກຂອງລາວ ແລະ ຫຼັງຈາກທີ່ງູໂຕນັ້ນຟື້ນຄືນ, ມັນກໍຕອດຊາວນາຈົນເຖິງແກ່ຄວາມຕາຍ. ເນື້ອໜັງຂອງມະນຸດກໍເໝືອນກັບງູດັ່ງກ່າວ ນັ້ນກໍຄື: ແກ່ນແທ້ຂອງມັນກໍຄືການທຳລາຍຊີວິດຂອງພວກເຂົາ ແລະ ເມື່ອມັນໄດ້ສິ່ງທີ່ມັນຕ້ອງການ, ຊີວິດຂອງເຈົ້າກໍກາຍເປັນສິ່ງທີ່ສູນເສຍໄປ. ເນື້ອໜັງເປັນຂອງຊາຕານ. ມີຄວາມປາຖະໜາເກີນຂອບເຂດຢູ່ພາຍໃນຕົວມັນ, ມັນຄິດພຽງແຕ່ເພື່ອຕົວມັນເອງ, ມັນຕ້ອງການເພີດເພີນກັບຄວາມສະດວກສະບາຍ ແລະ ດີອົກດີໃຈໃນເວລາຫວ່າງ, ຊຶມຊື່ນກັບຄວາມຂີ້ຄ້ານ ແລະ ຄວາມເຊື່ອງຊ້າ ແລະ ພໍໃຈກັບມັນຈົນເຖິງຂັ້ນທີ່ວ່າ ເຈົ້າຈະຖືກມັນກືນກິນໄປໃນທີ່ສຸດ. ເວົ້າໄດ້ວ່າ ຖ້າເຈົ້າເຮັດໃຫ້ມັນພໍໃຈໃນເວລານີ້, ຄັ້ງຕໍ່ໄປ ມັນກໍຈະຮຽກຮ້ອງອີກ. ມັນມີຄວາມປາຖະໜາທີ່ເກີນຂອບເຂດ ແລະ ຄວາມຮຽກຮ້ອງໃໝ່ຢູ່ສະເໝີ ແລະ ຖືໂອກາດທີ່ເຈົ້າຍອມຕາມເນື້ອໜັງ ເພື່ອເຮັດໃຫ້ເຈົ້າຖະໜອມມັນຫຼາຍຍິ່ງຂຶ້ນ ແລະ ດຳລົງຊີວິດທ່າມກາງຄວາມສະດວກສະບາຍຂອງມັນ ແລະ ຖ້າເຈົ້າບໍ່ເອົາຊະນະມັນ, ເຈົ້າຈະທຳລາຍຕົວເຈົ້າເອງໄປໃນທີ່ສຸດ. ເຈົ້າຈະສາມາດມີຊີວິດຕໍ່ໜ້າພຣະເຈົ້າໄດ້ ຫຼື ບໍ່ ແລະ ແມ່ນຫຍັງຈະເປັນຈຸດຈົບຂອງເຈົ້າໃນທີ່ສຸດແມ່ນຂຶ້ນຢູ່ກັບວ່າ ເຈົ້າຈະຕໍ່ຕ້ານກັບເນື້ອໜັງຂອງເຈົ້າແນວໃດ. ພຣະເຈົ້າໄດ້ຊ່ວຍເຈົ້າໃຫ້ລອດພົ້ນ ແລະ ໄດ້ເລືອກ ແລະ ລິຂິດເຈົ້າໄວ້ແລ້ວ, ແຕ່ຖ້າໃນປັດຈຸບັນ ເຈົ້າບໍ່ເຕັມໃຈທີ່ຈະເຮັດໃຫ້ພຣະອົງພໍໃຈ, ເຈົ້າກໍບໍ່ໄດ້ເຕັມໃຈທີ່ຈະນຳຄວາມຈິງເຂົ້າສູ່ການປະຕິບັດ, ເຈົ້າບໍ່ໄດ້ເຕັມໃຈທີ່ຈະກະບົດຕໍ່ເນື້ອໜັງຂອງເຈົ້າເອງ ດ້ວຍຫົວໃຈທີ່ຮັກພຣະເຈົ້າຢ່າງແທ້ຈິງ, ໃນທີ່ສຸດແລ້ວ ເຈົ້າກໍຈະທຳລາຍຕົວເຈົ້າເອງ ແລະ ສະນັ້ນກໍຈະໄດ້ທົນຮັບຄວາມເຈັບປວດທີ່ຮຸນແຮງ. ຖ້າເຈົ້າຍອມຕາມເນື້ອໜັງຢູ່ສະເໝີ, ຊາຕານກໍຈະກືນກິນເຈົ້າເທື່ອລະໜ້ອຍ ແລະ ປ່ອຍໃຫ້ເຈົ້າປາສະຈາກຊີວິດ ຫຼື ການສຳຜັດຂອງພຣະວິນຍານ ຈົນຮອດມື້ທີ່ເຈົ້າມືດມົນຢ່າງສົມບູນຢູ່ຂ້າງໃນ. ເມື່ອເຈົ້າດຳລົງຊີວິດໃນຄວາມມືດ, ເຈົ້າກໍຈະຕົກເປັນຊະເລີຍຂອງຊາຕານ, ເຈົ້າຈະບໍ່ມີພຣະເຈົ້າໃນຫົວໃຈຂອງເຈົ້າອີກຕໍ່ໄປ ແລະ ໃນເວລານັ້ນ ເຈົ້າຈະປະຕິເສດການມີຕົວຕົນຂອງພຣະເຈົ້າ ແລະ ປະຖິ້ມພຣະອົງ. ສະນັ້ນ ຖ້າຜູ້ຄົນປາຖະໜາທີ່ຈະຮັກພຣະເຈົ້າ, ພວກເຂົາຕ້ອງຈ່າຍລາຄາແຫ່ງຄວາມເຈັບປວດ ແລະ ອົດກັ້ນກັບຄວາມຍາກລຳບາກ. ບໍ່ຈຳເປັນຕ້ອງມີຄວາມກະຕືລືລົ້ນທາງດ້ານພາຍນອກ ແລະ ທົນທຸກກັບຄວາມຍາກລຳບາກ, ບໍ່ຈຳເປັນຕ້ອງອ່ານ ແລະ ດົ້ນຮົນຫຍັງຫຼາຍ; ກົງກັນຂ້າມ ພວກເຂົາຄວນປະຖິ້ມສິ່ງຕ່າງໆທີ່ຢູ່ພາຍໃນຕົວພວກເຂົາ ນັ້ນກໍຄື: ຄວາມຄິດທີ່ເກີນຂອບເຂດ, ຜົນປະໂຫຍດສ່ວນຕົວ ແລະ ການໄຕ່ຕອງ, ຄວາມຄິດ ແລະ ຄວາມຕັ້ງໃຈຂອງພວກເຂົາເອງ. ນັ້ນແມ່ນຄວາມປະສົງຂອງພຣະເຈົ້າ.

ການທີ່ພຣະເຈົ້າຈັດການກັບອຸປະນິໄສພາຍນອກຂອງຜູ້ຄົນຍັງເປັນສ່ວນໜຶ່ງໃນການປະຕິບັດພາລະກິດຂອງພຣະອົງອີກດ້ວຍ ຕົວຢ່າງເຊັ່ນ: ການຈັດການກັບດ້ານພາຍນອກຂອງຜູ້ຄົນ ແລະ ຄວາມເປັນມະນຸດທີ່ບໍ່ປົກກະຕິ ຫຼື ຮູບແບບຊີວິດ ແລະ ນິໄສຂອງພວກເຂົາ, ວິທີທາງ ແລະ ປະເພນີຂອງພວກເຂົາ ລວມເຖິງພາກປະຕິບັດພາຍນອກຂອງພວກເຂົາ ແລະ ຄວາມກະຕືລືລົ້ນຂອງພວກເຂົາ.

ແຕ່ເມື່ອພຣະອົງຮຽກຮ້ອງໃຫ້ ຜູ້ຄົນນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ປ່ຽນແປງອຸປະນິໄສຂອງພວກເຂົາ, ສິ່ງທີ່ຖືກຈັດການຫຼັກໆແມ່ນເຈດຕະນາ ແລະ ຄວາມຄິດທີ່ຢູ່ພາຍໃນພວກເຂົາ. ຖ້າພຽງແຕ່ຈັດການກັບອຸປະນິໄສພາຍນອກຂອງເຈົ້າເທົ່ານັ້ນແມ່ນບໍ່ຍາກ; ມັນເໝືອນກັບການຮຽກຮ້ອງບໍ່ໃຫ້ເຈົ້າກິນສິ່ງທີ່ເຈົ້າຮັກ ເຊິ່ງເປັນເລື່ອງງ່າຍດາຍ. ແຕ່ສິ່ງທີ່ແຕະຕ້ອງເຖິງຄວາມຄິດພາຍໃນຕົວເຈົ້ານັ້ນແມ່ນຍາກທີ່ຈະປະຖິ້ມໄດ້. ມັນຮຽກຮ້ອງໃຫ້ຜູ້ຄົນກໍ່ການກະບົດຕໍ່ເນື້ອໜັງ, ຍອມເສຍສະຫຼະ ແລະ ທົນທຸກທໍລະມານຕໍ່ໜ້າພຣະເຈົ້າ. ສິ່ງນີ້ແມ່ນຖືກທີ່ສຸດ ໂດຍສະເພາະກ່ຽວກັບເຈດຕະນາຂອງຜູ້ຄົນ. ຕັ້ງແຕ່ຜູ້ຄົນເລີ່ມເຊື່ອໃນພຣະເຈົ້າ, ພວກເຂົາກໍໄດ້ເຊື່ອງຊ້ອນເຈດຕະນາທີ່ບໍ່ຖືກຕ້ອງຫຼາຍຢ່າງ. ເມື່ອເຈົ້າບໍ່ນຳຄວາມຈິງເຂົ້າສູ່ການປະຕິບັດ, ເຈົ້າຮູ້ສຶກວ່າ ເຈດຕະນາທຸກຢ່າງຂອງເຈົ້າແມ່ນຖືກຕ້ອງ ແຕ່ເມື່ອມີບາງສິ່ງບາງຢ່າງເກີດຂຶ້ນກັບເຈົ້າ, ເຈົ້າຈະເຫັນວ່າ ເຈດຕະນາທີ່ບໍ່ຖືກຕ້ອງຫຼາຍຢ່າງພາຍໃນຕົວເຈົ້າ. ສະນັ້ນ ເມື່ອພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນແບບ, ພຣະອົງເຮັດໃຫ້ພວກເຂົາສຳນຶກວ່າ ມີຄວາມຄິດຫຼາຍຢ່າງພາຍໃນຕົວພວກເຂົາທີ່ກຳລັງຂັດຂວາງຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າ. ເມື່ອເຈົ້າຮັບຮູ້ວ່າ ເຈດຕະນາຂອງເຈົ້າຜິດໄປ, ຖ້າເຈົ້າສາມາດຢຸດປະຕິບັດຕາມຄວາມຄິດ ແລະ ເຈດຕະນາຂອງເຈົ້າ ແລະ ສາມາດເປັນພະຍານໃຫ້ກັບພຣະເຈົ້າ ແລະ ຍຶດໝັ້ນໃນຕຳແໜ່ງຂອງເຈົ້າໃນທຸກສິ່ງທຸກຢ່າງທີ່ເກີດຂຶ້ນກັບເຈົ້າ, ສິ່ງນີ້ກໍພິສູດແລ້ວວ່າ ເຈົ້າໄດ້ກໍ່ການກະບົດຕໍ່ເນື້ອໜັງແລ້ວ. ເມື່ອເຈົ້າກໍ່ການກະບົດຕໍ່ເນື້ອໜັງ ກໍຈະມີສົງຄາມເກີດຂຶ້ນພາຍໃນຕົວເຈົ້າໂດຍຫຼີກເວັ້ນບໍ່ໄດ້. ຊາຕານຈະພະຍາຍາມ ແລະ ເຮັດໃຫ້ຜູ້ຄົນປະຕິບັດຕາມມັນ, ຈະພະຍາຍາມ ແລະ ເຮັດໃຫ້ພວກເຂົາປະຕິບັດຕາມຄວາມຄິດແຫ່ງເນື້ອໜັງ ແລະ ປ້ອງກັນຜົນປະໂຫຍດຂອງເນື້ອໜັງ, ແຕ່ພຣະທຳຂອງພຣະເຈົ້າຈະໃຫ້ແສງສະຫວ່າງ ແລະ ເຍືອງທາງໃຫ້ກັບຜູ້ຄົນຢູ່ພາຍໃນ ແລະ ໃນເວລານີ້ ມັນກໍຂຶ້ນຢູ່ກັບເຈົ້າແລ້ວວ່າເຈົ້າຈະຕິດຕາມພຣະເຈົ້າ ຫຼື ຕິດຕາມຊາຕານ. ພຣະເຈົ້າຮຽກຮ້ອງໃຫ້ຜູ້ຄົນນຳຄວາມຈິງເຂົ້າສູ່ການປະຕິບັດຫຼັກໆກໍແມ່ນເພື່ອຈັດການກັບສິ່ງຕ່າງໆທີ່ຢູ່ພາຍໃນພວກເຂົາ, ເພື່ອຈັດການກັບຄວາມຄິດ ແລະ ແນວຄວາມຄິດຂອງພວກເຂົາທີ່ບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ພຣະວິນຍານບໍລິສຸດສຳຜັດຜູ້ຄົນໃນຫົວໃຈຂອງພວກເຂົາ, ໃຫ້ແສງສະຫວ່າງ ແລະ ເຍືອງທາງໃຫ້ກັບພວກເຂົາ. ສະນັ້ນເບື້ອງຫຼັງທຸກສິ່ງຢ່າງທີ່ເກີດຂຶ້ນແມ່ນມີການຕໍ່ສູ້ ນັ້ນກໍຄື: ທຸກຄັ້ງທີ່ຜູ້ຄົນນຳຄວາມຈິງເຂົ້າສູ່ການປະຕິບັດ ຫຼື ນຳຄວາມຮັກທີ່ມີຕໍ່ພຣະເຈົ້າເຂົ້າສູ່ການປະຕິບັດກໍຈະມີການຕໍ່ສູ້ຢ່າງຍິ່ງໃຫຍ່ ແລະ ເຖິງແມ່ນວ່າທຸກສິ່ງທຸກຢ່າງຈະເບິ່ງຄືປົກກະຕິກັບເນື້ອໜັງຂອງພວກເຂົາ, ໃນຄວາມຈິງແລ້ວ ການຕໍ່ສູ້ເອົາເປັນເອົາຕາຍໄດ້ດຳເນີນຂຶ້ນໃນສ່ວນເລິກຂອງຫົວໃຈຂອງພວກເຂົາ ແລະ ພຽງແຕ່ຫຼັງຈາກການຕໍ່ສູ້ທີ່ຮຸນແຮງນີ້, ຫຼັງຈາກການໄຕ່ຕອງຢ່າງໜັກຈຶ່ງຈະສາມາດຕັດສິນໄຊຊະນະ ຫຼື ຄວາມພ່າຍແພ້ໄດ້. ຄົນໃດໜຶ່ງບໍ່ຮູ້ຈັກວ່າຈະຫົວ ຫຼື ຈະໄຫ້ດີ. ເພາະເຈດຕະນາຫຼາຍຢ່າງທີ່ຢູ່ພາຍໃນຜູ້ຄົນແມ່ນບໍ່ຖືກຕ້ອງ ຫຼື ບໍ່ດັ່ງນັ້ນກໍຍ້ອນວ່າ ພາລະກິດສ່ວນຫຼາຍຂອງພຣະເຈົ້າແມ່ນບໍ່ສອດຄ່ອງກັບຄວາມຄິດຂອງພວກເຂົາ, ເມື່ອຜູ້ຄົນນຳຄວາມຈິງເຂົ້າສູ່ການປະຕິບັດ ການຕໍ່ສູ້ຢ່າງຍິ່ງໃຫຍ່ແມ່ນເກີດຂຶ້ນຢູ່ເບື້ອງຫຼັງ. ເມື່ອເວລານຳຄວາມຈິງນີ້ເຂົ້າສູ່ການປະຕິບັດ ແລະ ກ່ອນທີ່ຈະຕັດສິນໃຈເຮັດໃຫ້ພຣະເຈົ້າພໍໃຈໃນທີ່ສຸດ ຢູ່

ເບື້ອງຫຼັງຈະມີຜູ້ຄົນລັ່ງນໍ້າຕາແຫ່ງຄວາມໂສກເສົ້າຢ່າງນັບບໍ່ຖ້ວນ. ເປັນຍ້ອນການຕໍ່ສູ້ນີ້, ຜູ້ຄົນຈຶ່ງອົດກັ້ນຕໍ່ການທົນທຸກທໍລະມານ ແລະ ການຫຼໍ່ຫຼອມ; ນີ້ແມ່ນການທົນທຸກທໍລະມານທີ່ແທ້ຈິງ. ເມື່ອການຕໍ່ສູ້ມາເຖິງເຈົ້າ, ຖ້າເຈົ້າສາມາດຢືນຢູ່ຂ້າງພຣະເຈົ້າຢ່າງແທ້ຈິງໄດ້, ເຈົ້າກໍຈະສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້. ໃນລະຫວ່າງການປະຕິບັດຄວາມຈິງ ມັນບໍ່ສາມາດຫຼີກເວັ້ນໄດ້ທີ່ຄົນໜຶ່ງຈະທົນທຸກທໍລະມານພາຍໃນ; ເມື່ອພວກເຂົານໍາຄວາມຈິງເຂົ້າໃນການປະຕິບັດ ຖ້າທຸກສິ່ງທຸກຢ່າງຢູ່ພາຍໃນຜູ້ຄົນນັ້ນຖືກຕ້ອງ, ພວກເຂົາຈະບໍ່ຈໍາເປັນຕ້ອງຖືກພຣະເຈົ້າເຮັດໃຫ້ສົມບູນແບບ ແລະ ກໍຈະບໍ່ມີການຕໍ່ສູ້ ແລະພວກເຂົາກໍຈະບໍ່ທົນທຸກທໍລະມານ. ຍ້ອນວ່າ ມີຫຼາຍສິ່ງທີ່ຢູ່ພາຍໃນຜູ້ຄົນເຊິ່ງບໍ່ເໝາະສົມແກ່ການນໍາໃຊ້ໂດຍພຣະເຈົ້າ ແລະ ຍ້ອນວ່າມີອຸປະນິໄສຂອງເນື້ອໜັງຫຼາຍຢ່າງທີ່ເປັນປໍລະປັກ, ຜູ້ຄົນຈໍາເປັນຕ້ອງຮຽນຮູ້ບົດຮຽນແຫ່ງການກໍ່ການກະບົດຕໍ່ເນື້ອໜັງໃຫ້ເລິກເຊິ່ງຫຼາຍຂຶ້ນ. ນີ້ແມ່ນສິ່ງທີ່ພຣະເຈົ້າເອີ້ນວ່າການທົນທຸກທໍລະມານ ທີ່ພຣະອົງຮຽກຮ້ອງໃຫ້ມະນຸດປະສົບກັບພຣະອົງ. ເມື່ອເຈົ້າຜະເຊີນກັບຄວາມຫຍຸ້ງຍາກ ໃຫ້ຟ້າວ ແລະ ອະທິຖານຫາພຣະເຈົ້າວ່າ “ໂອ ຂ້າແດ່ພຣະອົງເຈົ້າ! ຂ້ານ້ອຍປາຖະໜາທີ່ຈະເຮັດໃຫ້ພຣະອົງພໍພຣະໄທ, ຂ້ານ້ອຍປາຖະໜາທີ່ຈະອົດທົນຕໍ່ຄວາມຍາກລໍາບາກຂັ້ນສຸດທ້າຍເພື່ອເຮັດໃຫ້ພຣະອົງພໍພຣະໄທ ແລະ ບໍ່ວ່າຂ້ານ້ອຍຈະຜະເຊີນກັບຄວາມລົ້ມເຫຼວທີ່ຍິ່ງໃຫຍ່ພຽງໃດກໍຕາມ, ຂ້ານ້ອຍກໍຕ້ອງເຮັດໃຫ້ພຣະອົງພໍພຣະໄທ. ເຖິງແມ່ນວ່າ ຂ້ານ້ອຍຕ້ອງເສຍສະຫຼະຊີວິດທັງໝົດຂອງຂ້ານ້ອຍ, ຂ້ານ້ອຍກໍຕ້ອງເຮັດໃຫ້ພຣະອົງພໍພຣະໄທ!” ດ້ວຍຄວາມຕັ້ງໃຈແບບນີ້, ເມື່ອເຈົ້າອະທິຖານແບບນັ້ນ ເຈົ້າກໍຈະສາມາດຍຶດໝັ້ນໃນຄໍາພະຍານຂອງເຈົ້າ. ທຸກເທື່ອທີ່ພວກເຂົານໍາຄວາມຈິງເຂົ້າສູ່ການປະຕິບັດ, ທຸກເທື່ອທີ່ພວກເຂົາປະສົບກັບການຫຼໍ່ຫຼອມ, ທຸກເທື່ອທີ່ພວກເຂົາຖືກທົດລອງ ແລະ ທຸກເທື່ອທີ່ພາລະກິດຂອງພຣະເຈົ້າມາເຖິງພວກເຂົາ, ຜູ້ຄົນກໍຕ້ອງອົດທົນຕໍ່ຄວາມເຈັບປວດຢ່າງຫຼວງຫຼາຍ. ທຸກສິ່ງນີ້ແມ່ນເປັນການທົດສອບສໍາລັບຜູ້ຄົນ ແລະ ດ້ວຍເຫດນັ້ນ ຈຶ່ງມີການຕໍ່ສູ້ພາຍໃນພວກເຂົາໝົດທຸກຄົນ. ນີ້ແມ່ນລາຄາແທ້ຈິງທີ່ພວກເຂົາຈ່າຍ. ການອ່ານພຣະທໍາຂອງພຣະເຈົ້າຫຼາຍຂຶ້ນ ແລະ ການດົ້ນຣົນຫຼາຍຂຶ້ນແມ່ນພາກສ່ວນຂອງລາຄານັ້ນ. ແຕ່ມັນແມ່ນສິ່ງທີ່ຜູ້ຄົນຄວນເຮັດ, ມັນຄືໜ້າທີ່ຂອງພວກເຂົາ ແລະ ຄວາມຮັບຜິດຊອບທີ່ພວກເຂົາຄວນເຮັດໃຫ້ສໍາເລັດ, ແຕ່ຜູ້ຄົນຕ້ອງປະຖິ້ມສິ່ງທີ່ຢູ່ພາຍໃນພວກເຂົາທີ່ຈໍາເປັນຕ້ອງປະຖິ້ມ. ຖ້າເຈົ້າບໍ່ປະຖິ້ມ, ບໍ່ວ່າການທົນທຸກພາຍນອກຂອງເຈົ້າຈະຫຼາຍສໍ່າໃດ ແລະ ບໍ່ວ່າເຈົ້າຈະດົ້ນຣົນຫຼາຍພຽງໃດກໍຕາມ, ທຸກສິ່ງກໍຈະສູນເປົ່າ! ເຊິ່ງເວົ້າໄດ້ວ່າ ມີພຽງແຕ່ການປ່ຽນແປງພາຍໃນເຈົ້າເທົ່ານັ້ນທີ່ສາມາດກໍານົດວ່າຄວາມຍາກລໍາບາກພາຍນອກຂອງເຈົ້າມີຄຸນຄ່າ ຫຼື ບໍ່. ເມື່ອອຸປະນິໄສພາຍໃນຂອງເຈົ້າໄດ້ຮັບການປ່ຽນແປງ ແລະ ເຈົ້າໄດ້ນໍາຄວາມຈິງເຂົ້າສູ່ການປະຕິບັດ, ການທົນທຸກພາຍນອກທັງໝົດຂອງເຈົ້າກໍຈະໄດ້ຮັບການເຫັນດີຈາກພຣະເຈົ້າ; ຖ້າບໍ່ມີການປ່ຽນແປງໃນອຸປະນິໄສພາຍໃນຂອງເຈົ້າ, ບໍ່ວ່າເຈົ້າຈະອົດທົນກັບການທົນທຸກຫຼາຍສໍ່າໃດກໍຕາມ ຫຼື ເຈົ້າຈະດົ້ນຣົນດ້ານພາຍນອກພຽງໃດກໍຕາມ, ກໍຈະບໍ່ມີການເຫັນດີຈາກພຣະເຈົ້າ ແລະ ຄວາມຍາກລໍາບາກທີ່ພຣະເຈົ້າບໍ່ຮອງຮັບກໍສູນເປົ່າ. ສະນັ້ນ, ບໍ່ວ່າລາຄາທີ່ເຈົ້າໄດ້ຈ່າຍນັ້ນໄດ້ຮັບການເຫັນດີຈາກພຣະເຈົ້າ ຫຼື ບໍ່ ແມ່ນຖືກກໍານົດໂດຍເງື່ອນໄຂທີ່ວ່າ

ມີການປ່ຽນແປງໃນຕົວເຈົ້າ ຫຼື ບໍ່ ແລະ ເຈົ້າໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ກະບົດຕໍ່ເຈດຕະນາ ແລະ ຄວາມຄິດຂອງເຈົ້າເອງເພື່ອຮັບເອົາຄວາມພໍໃຈຕາມຄວາມປະສົງຂອງພຣະເຈົ້າ, ຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ຄວາມຊື່ສັດຕໍ່ພຣະເຈົ້າ ຫຼື ບໍ່. ບໍ່ວ່າເຈົ້າຈະດົ້ນຮົນສໍ່າໃດກໍຕາມ, ຖ້າເຈົ້າບໍ່ຮູ້ຈັກທີ່ຈະກະບົດຕໍ່ເຈດຕະນາຂອງເຈົ້າເອງ, ແຕ່ມີພຽງແຕ່ສະແຫວງຫາການກະທຳພາຍນອກ ແລະ ຄວາມກະຕືລືລົ້ນ ແລະ ບໍ່ເຄີຍສົນໃຈຊີວິດຂອງເຈົ້າ, ແລ້ວຄວາມຍາກລຳບາກຂອງເຈົ້າກໍຈະສູນເປົ່າ. ຖ້າໃນສະພາບແວດລ້ອມໃດໜຶ່ງ ເຈົ້າມີບາງສິ່ງທີ່ເຈົ້າຕ້ອງການເວົ້າ, ແຕ່ໃນໃຈເຈົ້າ ເຈົ້າຮູ້ສຶກວ່າການເວົ້າສິ່ງນັ້ນແມ່ນບໍ່ຖືກຕ້ອງ, ການເວົ້າສິ່ງນັ້ນແມ່ນບໍ່ມີຜົນປະໂຫຍດຫຍັງໃຫ້ກັບອ້າຍເອື້ອຍນ້ອງຂອງເຈົ້າ ແລະ ອາດທຳຮ້າຍພວກເຂົາ, ແລ້ວເຈົ້າກໍບໍ່ຄວນເວົ້າມັນອອກໄປ ໂດຍເລືອກທີ່ຈະຮັບຄວາມເຈັບປວດຢູ່ພາຍໃນ, ຍ້ອນຄຳເວົ້າເຫຼົ່ານີ້ບໍ່ສາມາດເປັນທີ່ເພິ່ງພໍໃຈຄວາມປະສົງຂອງພຣະເຈົ້າໄດ້. ໃນເວລານີ້ ຈະມີການຕໍ່ສູ້ເກີດຂຶ້ນພາຍໃນຕົວເຈົ້າ, ແຕ່ເຈົ້າກໍຈະເຕັມໃຈທົນທຸກກັບຄວາມເຈັບປວດ ແລະ ເສຍສະຫຼະໃນສິ່ງທີ່ເຈົ້າຮັກ. ເຈົ້າຈະເຕັມໃຈອົດກັ້ນຕໍ່ຄວາມຍາກລຳບາກເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ເຖິງແມ່ນວ່າເຈົ້າທົນທຸກກັບຄວາມເຈັບປວດຢູ່ພາຍໃນ, ເຈົ້າກໍຈະບໍ່ຍອມເຮັດຕາມເນື້ອໜັງ ແລະ ພຣະເຈົ້າກໍຈະພໍໃຈ ແລະ ດ້ວຍເຫດນັ້ນ ເຈົ້າກໍຍັງຈະໄດ້ຮັບການປອບໃຈຢູ່ພາຍໃນອີກດ້ວຍ. ນີ້ແມ່ນການຈ່າຍລາຄາທີ່ແທ້ຈິງ ແລະ ເປັນລາຄາທີ່ພຣະເຈົ້າປາຖະໜາ. ຖ້າເຈົ້າປະຕິບັດໃນລັກສະນະນີ້, ພຣະເຈົ້າກໍຈະອວຍພອນເຈົ້າຢ່າງແນ່ນອນ; ຖ້າເຈົ້າບໍ່ສາມາດບັນລຸຕາມນີ້ໄດ້, ບໍ່ວ່າເຈົ້າຈະເຂົ້າໃຈຫຼາຍສໍ່າໃດກໍຕາມ ຫຼື ເຈົ້າສາມາດກ່າວໄດ້ດີພຽງໃດກໍຕາມ, ມັນກໍຈະບໍ່ເປັນປະໂຫຍດຫຍັງເລີຍ! ຖ້າໃນລະຫວ່າງເສັ້ນທາງໄປສູ່ການຮັກພຣະເຈົ້າ ເຈົ້າສາມາດຢືນຢູ່ຂ້າງພຣະເຈົ້າ ເມື່ອພຣະອົງຕໍ່ສູ້ກັບຊາຕານ ແລະ ເຈົ້າບໍ່ກັບຄືນໄປຫາຊາຕານ, ເຈົ້າກໍຈະບັນລຸຄວາມຮັກຕໍ່ພຣະເຈົ້າ ແລະ ເຈົ້າກໍຈະຍຶດໝັ້ນໃນຄຳພະຍານຂອງເຈົ້າ.

ໃນທຸກບາດກ້າວຂອງພາລະກິດທີ່ພຣະເຈົ້າປະຕິບັດໃນຜູ້ຄົນນັ້ນ, ເບິ່ງຈາກພາຍນອກ ມັນຄືກັບວ່າເປັນການປະຕິບັດຕໍ່ກັນລະຫວ່າງຜູ້ຄົນ ເໝືອນກັບວ່າມັນເກີດຈາກການຈັດແຈງຂອງມະນຸດ ຫຼື ການແຊກແຊງຂອງມະນຸດ. ແຕ່ໃນເບື້ອງຫຼັງແລ້ວ ທຸກບາດກ້າວຂອງພາລະກິດ ແລະ ທຸກສິ່ງທີ່ເກີດຂຶ້ນ ແມ່ນການເດີມພັນທີ່ຊາຕານສ້າງຂຶ້ນຕໍ່ໜ້າພຣະເຈົ້າ ແລະ ຮຽກຮ້ອງໃຫ້ຜູ້ຄົນຍຶດໝັ້ນໃນຄຳພະຍານທີ່ພວກເຂົາມີໃຫ້ກັບພຣະເຈົ້າ. ໃຫ້ສັງເກດເບິ່ງຕອນທີ່ໂຢບຖືກທົດລອງ ຕົວຢ່າງ: ໃນເບື້ອງຫຼັງແລ້ວ ຊາຕານກຳລັງເດີມພັນກັບພຣະເຈົ້າ ແລະ ສິ່ງທີ່ເກີດຂຶ້ນກັບໂຢບແມ່ນການກະທຳຂອງມະນຸດ ແລະ ການແຊກແຊງຂອງມະນຸດ. ເບື້ອງຫຼັງທຸກໆບາດກ້າວຂອງພາລະກິດທີ່ພຣະເຈົ້າປະຕິບັດໃນພວກເຈົ້າແມ່ນເປັນການເດີມພັນຂອງຊາຕານກັບພຣະເຈົ້າ, ທຸກສິ່ງທຸກຢ່າງທີ່ຢູ່ເບື້ອງຫຼັງແມ່ນການຕໍ່ສູ້. ຕົວຢ່າງ: ຖ້າເຈົ້າມີອະຄະຕິຕໍ່ອ້າຍເອື້ອຍນ້ອງຂອງເຈົ້າ, ເຈົ້າກໍຈະມີຄຳເວົ້າທີ່ເຈົ້າຕ້ອງການເວົ້າອອກໄປ ເຊິ່ງເປັນຄຳເວົ້າທີ່ເຈົ້າຮູ້ສຶກວ່າອາດບໍ່ພໍໃຈພຣະເຈົ້າ ແຕ່ຖ້າເຈົ້າບໍ່ເວົ້າອອກໄປ ເຈົ້າກໍຈະຮູ້ສຶກອຶດອັດຢູ່ຂ້າງໃນ ແລະ ໃນຊ່ວງເວລານີ້ ການຂັດແຍ້ງກໍຈະເກີດຂຶ້ນພາຍໃນຕົວເຈົ້າ ນັ້ນກໍຄື "ຂ້ານ້ອຍຄວນເວົ້າ ຫຼື ບໍ?" ນີ້ແມ່ນການຕໍ່ສູ້. ສະນັ້ນ, ໃນທຸກສິ່ງທີ່ເຈົ້າຜະເຊີນແມ່ນມີການຕໍ່ສູ້ ແລະ ເມື່ອ

ມີການຕໍ່ສູ້ພາຍໃນຕົວເຈົ້າ ພຣະເຈົ້າຈຶ່ງປະຕິບັດພາລະກິດພາຍໃນຕົວເຈົ້າ ຍ້ອນການຮ່ວມມືທີ່ແທ້ຈິງ
ແລະ ການທົນທຸກທີ່ແທ້ຈິງຂອງເຈົ້າ. ໃນທີ່ສຸດແລ້ວ ເຈົ້າກໍຈະສາມາດປະຖິ້ມບັນຫານັ້ນໄວ້ຢູ່ຂ້າງໃນ
ຕົວເຈົ້າ ແລະ ຄວາມໂມໂຫກໍຈະສູນສະຫຼາຍໄປຢ່າງທຳມະຊາດ. ສິ່ງດັ່ງກ່າວແມ່ນຜົນກະທົບຂອງ
ການທີ່ເຈົ້າຮ່ວມມືກັບພຣະເຈົ້າ. ທຸກສິ່ງທີ່ຜູ້ຄົນກະທຳຮຽກຮ້ອງໃຫ້ພວກເຂົາຍອມເສຍສະຫຼະສິ່ງໃດ
ໜຶ່ງໃນຄວາມພະຍາຍາມຂອງພວກເຂົາ. ຫາກປາສະຈາກຄວາມຍາກລຳບາກທີ່ແທ້ຈິງ ພວກເຂົາກໍບໍ່
ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້, ພວກເຂົາບໍ່ໄດ້ເຂົ້າໃກ້ການເຮັດໃຫ້ພຣະເຈົ້າພໍໃຈເລີຍ ແລະ
ພວກເຂົາກໍພຽງແຕ່ຄຸຍໂມ້ຄຳໂຄສະນາທີ່ວ່າງເປົ່າ! ຄຳໂຄສະນາທີ່ວ່າງເປົ່າເຫຼົ່ານີ້ສາມາດເຮັດໃຫ້
ພຣະເຈົ້າພໍໃຈໄດ້ບໍ? ເມື່ອພຣະເຈົ້າ ແລະ ຊາຕານຕໍ່ສູ້ກັນໃນຂອບເຂດຝ່າຍວິນຍານ ເຈົ້າຄວນເຮັດ
ແນວໃດໃຫ້ພຣະເຈົ້າພໍໃຈ ແລະ ເຈົ້າຄວນເຮັດແນວໃດເພື່ອຍຶດໝັ້ນໃນຄຳພະຍານທີ່ເຈົ້າມີໃຫ້ກັບ
ພຣະອົງ? ເຈົ້າຄວນຮູ້ຈັກວ່າ ທຸກສິ່ງທີ່ເກີດຂຶ້ນກັບເຈົ້າແມ່ນການທົດລອງທີ່ຍິ່ງໃຫຍ່ ແລະ ເປັນເວລາ
ທີ່ພຣະເຈົ້າຮຽກຮ້ອງໃຫ້ເຈົ້າເປັນພະຍານ. ເຖິງແມ່ນວ່າ ສິ່ງເຫຼົ່ານີ້ພາຍນອກອາດເບິ່ງຄືກັບວ່າ ບໍ່ສຳ
ຄັນ, ແຕ່ເມື່ອສິ່ງເຫຼົ່ານີ້ເກີດຂຶ້ນ ພວກມັນສະແດງວ່າ ເຈົ້າຮັກພຣະເຈົ້າ ຫຼື ບໍ. ຖ້າເຈົ້າຮັກ, ເຈົ້າຈະ
ສາມາດຍຶດໝັ້ນໃນຄຳພະຍານທີ່ເຈົ້າມີໃຫ້ກັບພຣະອົງ ແລະ ຖ້າເຈົ້າບໍ່ໄດ້ນຳເອົາຄວາມຮັກພຣະເຈົ້າເຂົ້າ
ສູ່ການປະຕິບັດແລ້ວ ສິ່ງນີ້ກໍສະແດງວ່າ ເຈົ້າບໍ່ແມ່ນຄົນທີ່ນຳຄວາມຈິງເຂົ້າສູ່ການປະຕິບັດ, ເຈົ້າ
ປາສະຈາກຄວາມຈິງ ແລະ ປາສະຈາກຊີວິດ, ເຈົ້າເປັນຄືກັບເຂົ້າແກບ! ທຸກສິ່ງທີ່ເກີດຂຶ້ນກັບມະນຸດ
ແມ່ນເກີດຂຶ້ນເມື່ອພຣະເຈົ້າໃຫ້ພວກເຂົາຍຶດໝັ້ນໃນຄຳພະຍານທີ່ພວກເຂົາມີໃຫ້ກັບພຣະອົງ. ເຖິງ
ແມ່ນວ່າ ໃນຊ່ວງເວລານີ້ ບໍ່ມີສິ່ງຮ້າຍແຮງເກີດຂຶ້ນກັບເຈົ້າ ແລະ ເຈົ້າກໍບໍ່ໄດ້ເປັນພະຍານທີ່ຍິ່ງໃຫຍ່,
ແຕ່ລາຍລະອຽດທຸກຢ່າງໃນການດຳລົງຊີວິດປະຈຳວັນຂອງເຈົ້າແມ່ນຂຶ້ນຢູ່ກັບຄຳພະຍານທີ່ໃຫ້ກັບ
ພຣະເຈົ້າ. ຖ້າເຈົ້າສາມາດເອົາຊະນະການຍົກຍ້ອງຈາກອ້າຍເອື້ອຍນ້ອງຂອງເຈົ້າ, ສະມາຊິກຄອບຄົວ
ຂອງເຈົ້າ ແລະ ທຸກຄົນທີ່ຢູ່ອ້ອມຮອບຕົວເຈົ້າ; ຖ້າມື້ໜຶ່ງ ຄົນທີ່ບໍ່ເຊື່ອມາ ແລະ ຍົກຍ້ອງທຸກສິ່ງທີ່
ເຈົ້າເຮັດ ແລະ ເຫັນວ່າ ທຸກສິ່ງທີ່ພຣະເຈົ້າກະທຳແມ່ນເປັນສິ່ງທີ່ມະຫັດສະຈັນ, ແລ້ວເຈົ້າກໍໄດ້ເປັນ
ພະຍານແລ້ວ. ເຖິງແມ່ນວ່າ ເຈົ້າບໍ່ມີຄວາມເຂົ້າໃຈ ແລະ ຄວາມສາມາດຂອງເຈົ້າກໍຕໍ່າ, ໂດຍຜ່ານການ
ທີ່ພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບ, ເຈົ້າກໍສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້ ແລະ ຄວາມຕັ້ງໃຈໃນ
ຄວາມປະສົງຂອງພຣະອົງ ເຮັດໃຫ້ຄົນອື່ນເຫັນວ່າ ພຣະອົງໄດ້ປະຕິບັດພາລະກິດຍິ່ງໃຫຍ່ຫຍັງແດ່ໃນ
ຜູ້ຄົນທີ່ມີຄວາມສາມາດໜ້ອຍທີ່ສຸດ. ເມື່ອຜູ້ຄົນຮຽນຮູ້ຈັກພຣະເຈົ້າ ແລະ ກາຍມາເປັນຜູ້ຊະນະຕໍ່ໜ້າ
ຊາຕານ, ຊື່ສັດກັບພຣະເຈົ້າໃນລະດັບທີ່ດີ. ແລ້ວກໍບໍ່ມີໃຜທີ່ມີຄວາມກ້າຫານຫຼາຍກວ່າຄົນກຸ່ມນີ້ ແລະ
ນີ້ກໍຈະເປັນຄຳພະຍານທີ່ຍິ່ງໃຫຍ່ທີ່ສຸດ. ເຖິງແມ່ນວ່າ ເຈົ້າບໍ່ສາມາດປະຕິບັດພາລະກິດທີ່ຍິ່ງໃຫຍ່, ເຈົ້າ
ກໍສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້. ຄົນອື່ນບໍ່ສາມາດປະຖິ້ມຄວາມຄິດຂອງພວກເຂົາ ແຕ່ເຈົ້າເຮັດ
ໄດ້; ຄົນອື່ນບໍ່ສາມາດເປັນພະຍານໃຫ້ກັບພຣະເຈົ້າໃນລະຫວ່າງປະສົບການທີ່ແທ້ຈິງຂອງພວກເຂົາ,
ແຕ່ເຈົ້າສາມາດນຳໃຊ້ວຸດທິພາວະ ແລະ ການກະທຳຂອງເຈົ້າເພື່ອຕອບແທນຄວາມຮັກຂອງພຣະເຈົ້າ
ແລະ ເປັນພະຍານທີ່ດັງກ້ອງກັງວານໃຫ້ກັບພຣະອົງ. ມີພຽງແຕ່ສິ່ງນີ້ເທົ່ານັ້ນທີ່ຖືວ່າເປັນການຮັກ

ພຣະເຈົ້າທີ່ແທ້ຈິງ. ຖ້າເຈົ້າບໍ່ສາມາດເຮັດສິ່ງນີ້ໄດ້ ແລ້ວເຈົ້າກໍບໍ່ໄດ້ເປັນພະຍານທ່າມກາງສະມາຊິກຄອບຄົວຂອງເຈົ້າ, ທ່າມກາງອ້າຍເອື້ອຍນ້ອງຂອງເຈົ້າ ຫຼື ຕໍ່ໜ້າຜູ້ຄົນເທິງແຜ່ນດິນໂລກ. ຖ້າເຈົ້າບໍ່ສາມາດເປັນພະຍານຕໍ່ໜ້າຊາຕານໄດ້, ຊາຕານກໍຈະຫົວຂວັນເຈົ້າ, ມັນກໍຈະປະຕິບັດຕໍ່ເຈົ້າເໝືອນກັບວ່າເປັນເລື່ອງຕະລົກ, ເປັນຂອງຫຼິ້ນ, ມັນຈະເຮັດໃຫ້ເຈົ້າເປັນຕົວຕະລົກຢູ່ເລື້ອຍໆ ແລະ ເຮັດໃຫ້ເຈົ້າເປັນບ້າ. ໃນອະນາຄົດ, ການທົດລອງທີ່ຍິ່ງໃຫຍ່ອາດເກີດຂຶ້ນກັບເຈົ້າ, ແຕ່ໃນປັດຈຸບັນ ຖ້າເຈົ້າຮັກພຣະເຈົ້າດ້ວຍໃຈຈິງ ແລະ ບໍ່ວ່າຈະມີການທົດລອງທີ່ຍິ່ງໃຫຍ່ສໍ່າໃດກໍຕາມຢູ່ຂ້າງໜ້າ ແລະ ບໍ່ວ່າຈະມີຫຍັງເກີດຂຶ້ນກັບເຈົ້າກໍຕາມ, ຖ້າເຈົ້າສາມາດຍຶດໝັ້ນໃນຄຳພະຍານຂອງເຈົ້າ ແລະ ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້, ແລ້ວຫົວໃຈຂອງເຈົ້າກໍຈະໄດ້ຮັບການປອບໂຍນ ແລະ ເຈົ້າຈະບໍ່ຢ້ານການທົດລອງບໍ່ວ່າຈະຮ້າຍແຮງສໍ່າໃດກໍຕາມ ທີ່ເຈົ້າຜະເຊີນໃນອະນາຄົດ. ພວກເຈົ້າບໍ່ສາມາດເຫັນວ່າແມ່ນຫຍັງຈະເກີດຂຶ້ນໃນອະນາຄົດ; ພວກເຈົ້າພຽງແຕ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໃນສະຖານະການໃນປັດຈຸບັນ. ພວກເຈົ້າບໍ່ສາມາດປະຕິບັດພາລະກິດທີ່ຍິ່ງໃຫຍ່ໃດກໍຕາມ ແລະ ຄວນເອົາໃຈໃສ່ໃນການເຮັດໃຫ້ພຣະເຈົ້າພໍໃຈ ໂດຍການຜະເຊີນກັບພຣະທຳຂອງພຣະອົງໃນຊີວິດຈິງ ແລະ ເປັນພະຍານທີ່ໜັກແໜ້ນ ແລະ ກ້ອງກັງວານ ເຊິ່ງຈະນຳຄວາມອັບອາຍມາສູ່ຊາຕານ. ເຖິງແມ່ນວ່າ ເນື້ອໜັງຂອງເຈົ້າຈະຍັງບໍ່ຖືກເຮັດໃຫ້ພໍໃຈ ແລະ ຈະຍັງທົນທຸກຢູ່, ເຈົ້າກໍໄດ້ເຮັດໃຫ້ພຣະເຈົ້າພໍໃຈແລ້ວ ແລະ ນຳຄວາມອັບອາຍມາສູ່ຊາຕານ. ຖ້າເຈົ້າປະຕິບັດໃນລັກສະນະນີ້ຢູ່ສະເໝີ, ພຣະເຈົ້າກໍຈະເປີດເຜີຍເສັ້ນທາງທີ່ຢູ່ຕໍ່ໜ້າເຈົ້າ. ມື້ໜຶ່ງເມື່ອການທົດລອງທີ່ຍິ່ງໃຫຍ່ມາເຖິງ, ຄົນອື່ນຈະລົ້ມລົງ, ແຕ່ເຈົ້າຍັງສາມາດຍຶດໝັ້ນ ນັ້ນກໍຄືຍ້ອນລາຄາທີ່ເຈົ້າໄດ້ຈ່າຍ ພຣະເຈົ້າຈະປົກປ້ອງເຈົ້າ ເພື່ອເຈົ້າຈະສາມາດຍຶດໝັ້ນ ແລະ ບໍ່ລົ້ມລົງ. ໂດຍທົ່ວໄປແລ້ວ ຖ້າເຈົ້າສາມາດນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ເຮັດໃຫ້ພຣະເຈົ້າພໍໃຈດ້ວຍຫົວໃຈທີ່ຮັກພຣະອົງຢ່າງແທ້ຈິງ, ແລ້ວພຣະເຈົ້າກໍຈະປົກປ້ອງເຈົ້າຢ່າງແນ່ນອນໃນລະຫວ່າງການທົດລອງໃນອະນາຄົດ. ເຖິງແມ່ນວ່າ ເຈົ້າໂງ່ຈ້າ ແລະ ມີວຸດທິພາວະໜ້ອຍ ແລະ ຄວາມສາມາດຕໍ່າ, ພຣະເຈົ້າກໍຈະບໍ່ຈຳແນກເຈົ້າອອກ. ມັນຂຶ້ນກັບວ່າ ເຈດຕະນາຂອງເຈົ້ານັ້ນຖືກຕ້ອງ ຫຼື ບໍ່. ໃນປັດຈຸບັນເຈົ້າສາມາດເຮັດໃຫ້ພຣະເຈົ້າພໍໃຈ ເຊິ່ງເຈົ້າໃສ່ໃຈກັບລາຍລະອຽດເລັກນ້ອຍທີ່ສຸດ, ເຈົ້າເຮັດໃຫ້ພຣະເຈົ້າພໍໃຈໃນທຸກສິ່ງທຸກຢ່າງ, ເຈົ້າມີຫົວໃຈທີ່ຮັກພຣະເຈົ້າຢ່າງແທ້ຈິງ, ເຈົ້າມອບຫົວໃຈທີ່ແທ້ຈິງໃຫ້ກັບພຣະເຈົ້າ ແລະ ເຖິງແມ່ນວ່າມີບາງສິ່ງທີ່ເຈົ້າຍັງບໍ່ເຂົ້າໃຈ, ເຈົ້າກໍສາມາດມາຢູ່ຕໍ່ໜ້າພຣະເຈົ້າເພື່ອແກ້ໄຂເຈດຕະນາຂອງເຈົ້າ ແລະ ສະແຫວງຫາຄວາມປະສົງຂອງພຣະເຈົ້າ ແລະ ເຈົ້າເຮັດທຸກສິ່ງທຸກຢ່າງເພື່ອເຮັດໃຫ້ພຣະເຈົ້າພໍໃຈ. ບາງເທື່ອ ອ້າຍເອື້ອຍນ້ອງຂອງເຈົ້າຈະປະຖິ້ມເຈົ້າ, ແຕ່ຫົວໃຈຂອງເຈົ້າກໍຈະຍັງເຮັດໃຫ້ພຣະເຈົ້າພໍໃຈ ແລະ ເຈົ້າຈະບໍ່ປາຖະໜາຄວາມສຸກທາງເນື້ອໜັງ. ຖ້າເຈົ້າປະຕິບັດໃນລັກສະນະນີ້ຢູ່ສະເໝີ, ເຈົ້າກໍຈະໄດ້ຮັບການປົກປ້ອງ ເມື່ອການທົດລອງທີ່ຍິ່ງໃຫຍ່ມາເຖິງເຈົ້າ.

ແມ່ນຫຍັງຄືສະພາວະພາຍໃນຜູ້ຄົນ ທີ່ການທົດລອງແນໃສ່? ພວກມັນແນໃສ່ອຸປະນິໄສທີ່ເປັນປໍລະປັກໃນຜູ້ຄົນ ເຊິ່ງບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້. ມີຫຼາຍສິ່ງທີ່ບໍ່ບໍລິສຸດພາຍໃນຜູ້ຄົນ ແລະ ມີຫຼາຍສິ່ງທີ່ບໍ່ຈິງໃຈ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງເຮັດໃຫ້ຜູ້ຄົນໄດ້ຮັບການທົດລອງເພື່ອເຮັດໃຫ້

ພວກເຂົາບໍລິສຸດ, ແຕ່ຖ້າໃນປັດຈຸບັນ ເຈົ້າສາມາດເຮັດໃຫ້ພຣະເຈົ້າພໍໃຈ ແລ້ວການທົດລອງໃນອະນາຄົດກໍຈະເປັນການເຮັດໃຫ້ເຈົ້າສົມບູນແບບ. ຖ້າໃນປັດຈຸບັນ ເຈົ້າບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈ ແລ້ວການທົດລອງໃນອະນາຄົດກໍຈະລໍ້ລວງເຈົ້າ ແລະ ເຈົ້າກໍຈະລົ້ມລົງໂດຍບໍ່ໄດ້ເຈດຕະນາ ແລະ ໃນເວລານັ້ນ ເຈົ້າກໍຈະບໍ່ສາມາດຊ່ວຍຕົນເອງໄດ້ ຍ້ອນເຈົ້າບໍ່ສາມາດນໍາທັນພາລະກິດຂອງພຣະເຈົ້າ ແລະ ບໍ່ມີວຸດທິພາວະທີ່ແທ້ຈິງ. ດ້ວຍເຫດນັ້ນ ຖ້າເຈົ້າປາຖະໜາທີ່ຈະສາມາດຍຶດໝັ້ນໃນອະນາຄົດ, ເພື່ອເຮັດໃຫ້ພຣະເຈົ້າພໍໃຈຫຼາຍຂຶ້ນ ແລະ ຕິດຕາມພຣະອົງໄປຈົນເຖິງຈຸດສິ້ນສຸດ, ໃນປັດຈຸບັນ ເຈົ້າຕ້ອງສ້າງພື້ນຖານທີ່ເຂັ້ມແຂງ. ເຈົ້າຕ້ອງເຮັດໃຫ້ພຣະເຈົ້າພໍໃຈ ໂດຍການນໍາຄວາມຈິງເຂົ້າສູ່ການປະຕິບັດໃນທຸກສິ່ງທຸກຢ່າງ ແລະ ຕັ້ງໃຈໃນຄວາມປະສົງຂອງພຣະເຈົ້າ. ຖ້າເຈົ້າປະຕິບັດໃນລັກສະນະນີ້ຢູ່ສະເໝີ ກໍຈະມີພື້ນຖານຢູ່ພາຍໃນຕົວເຈົ້າ ແລະ ພຣະເຈົ້າຈະດົນບັນດານຫົວໃຈ ທີ່ຮັກພຣະອົງພາຍໃນຕົວເຈົ້າ ແລະ ພຣະອົງກໍຈະມອບຄວາມເຊື່ອໃຫ້ກັບເຈົ້າ. ມື້ໜຶ່ງ ເມື່ອການທົດລອງເກີດຂຶ້ນກັບເຈົ້າແທ້ໆ, ເຈົ້າອາດທົນທຸກກັບຄວາມເຈັບປວດບາງຢ່າງ ແລະ ຮູ້ສຶກເສົ້າເສຍໃຈຈົນເຖິງທີ່ສຸດ ແລະ ທົນທຸກກັບຄວາມໂສກເສົ້າຢ່າງຮຸນແຮງ ເໝືອນກັບວ່າເຈົ້າຈະຕາຍ, ແຕ່ຄວາມຮັກພຣະເຈົ້າຂອງເຈົ້າຈະບໍ່ປ່ຽນແປງ ແລະ ຈະເລິກເຊິ່ງຫຼາຍຍິ່ງຂຶ້ນ. ສິ່ງດັ່ງກ່າວແມ່ນການອວຍພອນຂອງພຣະເຈົ້າ. ຖ້າເຈົ້າສາມາດຍອມຮັບທຸກສິ່ງທີ່ພຣະເຈົ້າກ່າວ ແລະ ກະທໍາໃນປັດຈຸບັນດ້ວຍຫົວໃຈແຫ່ງການເຊື່ອຟັງ, ແລ້ວເຈົ້າກໍຈະໄດ້ຮັບການອວຍພອນໂດຍພຣະເຈົ້າຢ່າງແນ່ນອນ ແລະ ດ້ວຍເຫດນັ້ນ ເຈົ້າກໍຈະກາຍເປັນຄົນທີ່ໄດ້ຮັບການອວຍພອນໂດຍພຣະເຈົ້າ ແລະ ຮັບພຣະສັນຍາຂອງພຣະອົງ. ຖ້າໃນປັດຈຸບັນ ເຈົ້າບໍ່ປະຕິບັດ, ເມື່ອການທົດລອງເກີດຂຶ້ນກັບເຈົ້າໃນມື້ໜຶ່ງ ເຈົ້າກໍຈະປາສະຈາກຄວາມເຊື່ອ ຫຼື ຫົວໃຈແຫ່ງຄວາມຮັກ ແລະ ໃນເວລານັ້ນ ການທົດລອງກໍຈະກາຍມາເປັນການລໍ້ລວງ; ເຈົ້າກໍຈະຕົກລົງທ່າມກາງການລໍ້ລວງຂອງຊາຕານ ແລະ ຈະບໍ່ມີວິທີຫຼົບໜີໄດ້. ໃນປັດຈຸບັນ, ເຈົ້າອາດຍຶດໝັ້ນເມື່ອການທົດລອງເລັກໆນ້ອຍໆເກີດຂຶ້ນກັບເຈົ້າ, ແຕ່ເຈົ້າອາດຈະບໍ່ສາມາດຍຶດໝັ້ນກັບການທົດລອງອັນຍິ່ງໃຫຍ່ໆເກີດຂຶ້ນກັບເຈົ້າໃນມື້ໜຶ່ງ. ບາງຄົນອວດດີ ແລະ ຄິດວ່າ ພວກເຂົາໃກ້ຈະສົມບູນແລ້ວ. ຖ້າເຈົ້າບໍ່ຈິງໃຈຫຼາຍຂຶ້ນໃນເວລາດັ່ງກ່າວ ແລະ ຍັງຄົງພໍໃຈໃນຕົນເອງ, ແລ້ວເຈົ້າກໍຈະຕົກຢູ່ໃນອັນຕະລາຍ. ໃນປັດຈຸບັນ ພຣະເຈົ້າບໍ່ໄດ້ປະຕິບັດພາລະກິດແຫ່ງການທົດລອງທີ່ຍິ່ງໃຫຍ່ ແລະ ທຸກສິ່ງປາກົດວ່າປົກກະຕິດີ, ແຕ່ເມື່ອພຣະເຈົ້າທົດລອງເຈົ້າ, ເຈົ້າຈະຄົ້ນພົບວ່າ ເຈົ້າຍັງຂາດເຂີນຫຼາຍ, ຍ້ອນວຸດທິພາວະຂອງເຈົ້າຕໍ່າເກີນໄປ ແລະ ເຈົ້າບໍ່ສາມາດອົດກັ້ນຕໍ່ການທົດລອງທີ່ຍິ່ງໃຫຍ່ນັ້ນໄດ້. ຖ້າເຈົ້າຍັງຢູ່ບ່ອນເກົ່າໃນແບບທີ່ເຈົ້າເປັນ ແລະ ຢູ່ໃນສະຖານະຂອງຄວາມເຊື່ອງຊ້າ, ແລ້ວເມື່ອມີການທົດລອງມາ ເຈົ້າກໍຈະລົ້ມ. ພວກເຈົ້າຄວນເບິ່ງສະເໝີວ່າ ວຸດທິພາວະຂອງພວກເຈົ້າຕໍ່າສໍ່າໃດ; ມີແຕ່ດ້ວຍວິທີນີ້ເທົ່ານັ້ນ ພວກເຈົ້າຈຶ່ງຈະກ້າວໜ້າ. ຖ້າມີພຽງແຕ່ໃນລະຫວ່າງການທົດລອງເທົ່ານັ້ນ ທີ່ເຮັດໃຫ້ເຈົ້າເຫັນວ່າ ວຸດທິພາວະຂອງເຈົ້າຕໍ່າຫຼາຍ, ກໍາລັງໃຈກໍອ່ອນແອຫຼາຍ, ຄວາມຈິງໃນຕົວເຈົ້າກໍມີພຽງໜ້ອຍດຽວ ແລະ ເຈົ້າຂາດຄວາມເໝາະສົມຕໍ່ຄວາມປະສົງຂອງພຣະເຈົ້າ ແລະ ຖ້າເຈົ້າພຽງແຕ່ເຂົ້າໃຈສິ່ງເຫຼົ່ານີ້ໃນຕອນນັ້ນ, ມັນກໍຈະຊ້າເກີນໄປແລ້ວ.

ຖ້າເຈົ້າບໍ່ຮູ້ຈັກອຸປະນິໄສຂອງພຣະເຈົ້າ ແລ້ວເຈົ້າກໍຈະພ່າຍແພ້ໃນລະຫວ່າງການທົດລອງຢ່າງຫຼີກເວັ້ນບໍ່ໄດ້, ຍ້ອນເຈົ້າບໍ່ຮັບຮູ້ວ່າ ພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນແບບໄດ້ແນວໃດ, ພຣະອົງເຮັດໃຫ້ພວກເຂົາສົມບູນແບບດ້ວຍວິທີໃດ ແລະ ເມື່ອການທົດລອງຂອງພຣະເຈົ້າມາເຖິງເຈົ້າ ແລະ ການທົດລອງເຫຼົ່ານັ້ນບໍ່ເຂົ້າກັນກັບຄວາມຄິດຂອງເຈົ້າ, ເຈົ້າກໍຈະບໍ່ສາມາດຍຶດໝັ້ນໄດ້. ຄວາມຮັກທີ່ແທ້ຈິງຂອງພຣະເຈົ້າແມ່ນອຸປະນິໄສທັງໝົດຂອງພຣະອົງ ແລະ ເມື່ອອຸປະນິໄສທັງໝົດຂອງພຣະອົງຖືກສຳແດງໃຫ້ກັບຜູ້ຄົນ, ມັນຈະເກີດຫຍັງຂຶ້ນກັບເນື້ອໜັງຂອງເຈົ້າ? ເມື່ອອຸປະນິໄສທີ່ຊອບທຳຂອງພຣະອົງຖືກສຳແດງໃຫ້ກັບຜູ້ຄົນ, ເນື້ອໜັງຂອງພວກເຂົາກໍຈະທົນທຸກກັບຄວາມເຈັບປວດຢ່າງໃຫຍ່ຫຼວງໂດຍຫຼີກເວັ້ນບໍ່ໄດ້. ຖ້າເຈົ້າບໍ່ທົນທຸກຕໍ່ຄວາມເຈັບປວດນີ້ ແລ້ວເຈົ້າກໍບໍ່ສາມາດຖືກພຣະເຈົ້າເຮັດໃຫ້ສົມບູນໄດ້ ຫຼື ເຈົ້າຈະບໍ່ສາມາດອຸທິດຄວາມຮັກທີ່ແທ້ຈິງໃຫ້ກັບພຣະເຈົ້າໄດ້. ຖ້າພຣະເຈົ້າເຮັດໃຫ້ເຈົ້າສົມບູນແບບ ພຣະອົງກໍຈະສຳແດງອຸປະນິໄສທັງໝົດຂອງພຣະອົງໃຫ້ກັບເຈົ້າຢ່າງແນ່ນອນ. ຕັ້ງແຕ່ເວລາແຫ່ງການຊົງສ້າງຈົນເຖິງປັດຈຸບັນ, ພຣະເຈົ້າບໍ່ເຄີຍສຳແດງອຸປະນິໄສທັງໝົດຂອງພຣະອົງຕໍ່ມະນຸດຈັກເທື່ອ, ແຕ່ໃນລະຫວ່າງຍຸກສຸດທ້າຍນີ້ ພຣະອົງໄດ້ເປີດເຜີຍອຸປະນິໄສນັ້ນໃຫ້ກັບກຸ່ມຄົນທີ່ພຣະອົງໄດ້ລິຂິດ ແລະ ໄດ້ເລືອກໄວ້ແລ້ວ ແລະ ໂດຍການເຮັດໃຫ້ຜູ້ຄົນສົມບູນ, ພຣະອົງເປີດເຜີຍອຸປະນິໄສຂອງພຣະອົງ, ຜ່ານທາງທີ່ພຣະອົງເຮັດໃຫ້ກຸ່ມຄົນສົມບູນ. ສິ່ງດັ່ງກ່າວແມ່ນຄວາມຮັກທີ່ແທ້ຈິງຂອງພຣະເຈົ້າທີ່ມີໃຫ້ກັບຜູ້ຄົນ. ການພະເຊີນຄວາມຮັກທີ່ແທ້ຈິງຂອງພຣະເຈົ້ານັ້ນ ແມ່ນຮຽກຮ້ອງໃຫ້ຜູ້ຄົນທົນທຸກກັບຄວາມເຈັບປວດຢ່າງໃຫຍ່ຫຼວງ ແລະ ຈ່າຍລາຄາທີ່ສູງ. ມີແຕ່ຫຼັງຈາກສິ່ງນີ້ເທົ່ານັ້ນ ພວກເຂົາຈຶ່ງຈະຖືກຮັບໂດຍພຣະເຈົ້າ ແລະ ຈະສາມາດມອບຄວາມຮັກທີ່ແທ້ຈິງຄືນໃຫ້ກັບພຣະເຈົ້າໄດ້ ແລະມີພຽງແຕ່ເມື່ອນັ້ນ ພຣະເຈົ້າຈຶ່ງຈະພໍໃຈ. ຖ້າຜູ້ຄົນປາຖະໜາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນແບບ ແລະ ຖ້າພວກເຂົາປາຖະໜາທີ່ຈະປະຕິບັດຕາມຄວາມປະສົງຂອງພຣະອົງ ແລະ ມອບຄວາມຮັກທີ່ແທ້ຈິງຂອງພວກເຂົາໃຫ້ກັບພຣະເຈົ້າຢ່າງເຕັມທີ່, ພວກເຂົາກໍຕ້ອງພະເຊີນກັບການທົນທຸກຢ່າງໃຫຍ່ຫຼວງ ແລະ ການທໍລະມານຫຼາຍຢ່າງຈາກສະພາບການຕ່າງໆຂອງພວກເຂົາ, ເພື່ອທົນທຸກກັບຄວາມເຈັບປວດທີ່ຮ້າຍແຮງກວ່າຄວາມຕາຍ. ໃນທີ່ສຸດ ພວກເຂົາກໍຈະຖືກບັງຄັບໃຫ້ມອບຫົວໃຈທີ່ແທ້ຈິງຂອງພວກເຂົາຄືນໃຫ້ກັບພຣະເຈົ້າ. ບໍ່ວ່າຜູ້ໃດຜູ້ໜຶ່ງຈະຮັກພຣະເຈົ້າຢ່າງແທ້ຈິງ ຫຼື ບໍ່, ມັນໄດ້ຖືກເປີດເຜີຍຢູ່ໃນລະຫວ່າງຄວາມຍາກລຳບາກ ແລະ ການຫຼໍ່ຫຼອມ. ພຣະເຈົ້າເຮັດໃຫ້ຄວາມຮັກຂອງຜູ້ຄົນບໍລິສຸດ ແລະ ສິ່ງນີ້ບັນລຸຜົນຈາກທ່າມກາງຄວາມຍາກລຳບາກ ແລະ ການຫຼໍ່ຫຼອມເທົ່ານັ້ນ.

# ການສົນທະນາສັ້ນໆ ກ່ຽວກັບ "ອານາຈັກພັນປີມາຮອດແລ້ວ"

ພວກເຈົ້າຄິດແນວໃດກ່ຽວກັບນິມິດແຫ່ງອານາຈັກພັນປີ? ບາງຄົນຄິດກ່ຽວກັບມັນຫຼາຍ ແລະ ພວກເຂົາເວົ້າວ່າ: "ອານາຈັກພັນປີຈະຄົງຢູ່ເທິງແຜ່ນດິນໂລກເປັນເວລາໜຶ່ງພັນປີ ເຊິ່ງດ້ວຍເຫດນັ້ນ ຖ້າຫາກສະມາຊິກອາວຸໂສຂອງຄຣິສຕະຈັກທີ່ຍັງບໍ່ໄດ້ແຕ່ງດອງ, ພວກເຂົາກໍຕ້ອງໄດ້ແຕ່ງດອງບໍ? ຄອບຄົວຂອງຂ້ານ້ອຍບໍ່ມີເງິນ, ຂ້ານ້ອຍຄວນຈະເລີ່ມຫາເງິນບໍ? ..." ອານາຈັກພັນປີແມ່ນຫຍັງ? ພວກເຈົ້າຮູ້ຈັກບໍ? ຜູ້ຄົນແມ່ນຕາບອດຫຼາຍ ແລະ ໄດ້ຮັບຄວາມທຸກທໍລະມານຢ່າງໃຫຍ່ຫຼວງ. ໃນຄວາມຈິງແລ້ວ ອານາຈັກພັນປີຍັງບໍ່ທັນມາເຖິງຢ່າງເປັນທາງການເທື່ອ. ໃນລະຫວ່າງຂັ້ນຕອນຂອງການເຮັດໃຫ້ຜູ້ຄົນສົມບູນ, ອານາຈັກພັນປີເປັນພຽງລູກນົກນ້ອຍທີ່ຫາກໍເກີດ; ໃນເວລາທີ່ອານາຈັກພັນປີໄດ້ຖືກກ່າວເຖິງໂດຍພຣະເຈົ້າ, ມະນຸດກໍຄົງຈະໄດ້ຖືກເຮັດໃຫ້ສົມບູນແລ້ວ. ກ່ອນໜ້ານີ້, ໄດ້ມີການເວົ້າກັນວ່າ ຜູ້ຄົນຈະເປັນເໝືອນນັກບຸນ ແລະ ຕັ້ງໝັ້ນຢູ່ໃນດິນແດນແຫ່ງຊີນິມ. ເມື່ອຜູ້ຄົນໄດ້ຖືກເຮັດໃຫ້ສົມບູນເທົ່ານັ້ນ, ເມື່ອພວກເຂົາກາຍເປັນນັກບຸນທີ່ພຣະເຈົ້າກ່າວເຖິງ ແລ້ວເມື່ອນັ້ນອານາຈັກພັນປີກໍຈະມາເຖິງ. ເມື່ອພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນ, ພຣະອົງຊໍາລະລ້າງເຮັດໃຫ້ພວກເຂົາບໍລິສຸດ ແລະ ຍິ່ງພວກເຂົາບໍລິສຸດຫຼາຍຂຶ້ນເທົ່າໃດ ພວກເຂົາກໍຍິ່ງໄດ້ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າຫຼາຍຂຶ້ນເທົ່ານັ້ນ. ເມື່ອຄວາມບໍ່ບໍລິສຸດ, ການກະບົດ, ການຕໍ່ຕ້ານ ແລະ ສິ່ງຕ່າງໆຂອງເນື້ອໜັງທີ່ຢູ່ພາຍໃນຕົວເຈົ້າຖືກຂັບໄລ່ອອກໝົດແລ້ວ, ເມື່ອເຈົ້າໄດ້ຮັບການຊໍາລະລ້າງໃຫ້ບໍລິສຸດ, ເຈົ້າກໍຈະໄດ້ເປັນທີ່ຮັກຂອງພຣະເຈົ້າ (ເວົ້າໄດ້ອີກຢ່າງໜຶ່ງກໍຄື ເຈົ້າຈະໄດ້ເປັນນັກບຸນ); ເມື່ອເຈົ້າໄດ້ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ແລະ ກາຍເປັນນັກບຸນ, ເຈົ້າກໍຈະໄດ້ຢູ່ໃນອານາຈັກພັນປີ. ບັດນີ້ ແມ່ນຍຸກແຫ່ງລາຊະອານາຈັກ. ໃນຍຸກແຫ່ງອານາຈັກພັນປີນັ້ນ ຜູ້ຄົນຈະອາໄສພຣະທໍາຂອງພຣະເຈົ້າເພື່ອໃຫ້ມີຊີວິດຢູ່ ແລະ ທຸກຊາດຈະມາຢູ່ພາຍໃຕ້ນາມຂອງພຣະເຈົ້າ ແລະ ທຸກຄົນຈະມາອ່ານພຣະທໍາຂອງພຣະເຈົ້າ. ໃນເວລານັ້ນ ບາງຄົນກໍຈະໂທຫາກັນໂດຍໃຊ້ໂທລະສັບ, ບາງຄົນຈະສົ່ງແຟັກ... ພວກເຂົາຈະນໍາໃຊ້ທຸກວິທີທາງເພື່ອເຂົ້າເຖິງພຣະທໍາຂອງພຣະເຈົ້າ ແລະ ພວກເຈົ້າເຊັ່ນດຽວກັນກໍຈະມາຢູ່ພາຍໃຕ້ພຣະທໍາຂອງພຣະເຈົ້າ. ທັງໝົດນີ້ ແມ່ນສິ່ງທີ່ຈະເກີດຂຶ້ນ ພາຍຫລັງທີ່ຜູ້ຄົນໄດ້ຖືກເຮັດໃຫ້ສົມບູນ. ປັດຈຸບັນນີ້ຜູ້ຄົນທີ່ໄດ້ຖືກເຮັດໃຫ້ສົມບູນ, ຖືກຫຼໍ່ຫຼອມ, ໄດ້ຮັບແສງສະຫວ່າງ ແລະ ຖືກນໍາທາງໂດຍພຣະທໍາ; ນີ້ແມ່ນຍຸກແຫ່ງລາຊະອານາຈັກ, ມັນແມ່ນຂັ້ນຕອນທີ່ຜູ້ຄົນຖືກເຮັດໃຫ້ສົມບູນ ແລະ ຍຸກນີ້ບໍ່ໄດ້ເຊື່ອມໂຍງກັບຍຸກແຫ່ງອານາຈັກພັນປີ. ໃນລະຫວ່າງຍຸກແຫ່ງອານາຈັກພັນປີນັ້ນ, ຜູ້ຄົນແມ່ນຈະໄດ້ຖືກເຮັດໃຫ້ສົມບູນແລ້ວ ແລະ ອຸປະນິໄສທີ່ເສື່ອມຊາມພາຍໃນພວກເຂົາກໍຈະໄດ້ຖືກເຮັດໃຫ້ບໍລິສຸດເຊັ່ນດຽວກັນ. ໃນເວລານັ້ນ, ພຣະທໍາທີ່ກ່າວໂດຍພຣະເຈົ້າແມ່ນຈະນໍາພາຜູ້ຄົນກ້າວໄປຂ້າງໜ້າເທື່ອລະກ້າວ ແລະ ເປີດເຜີຍຄວາມລຶກລັບທັງໝົດຂອງພາລະກິດຂອງພຣະເຈົ້າເລີ່ມແຕ່ເວລາຂອງການສ້າງໂລກຈົນເຖິງປັດຈຸບັນ ແລະ ພຣະທໍາຂອງພຣະອົງຈະບອກຜູ້ຄົນກ່ຽວກັບການກະທໍາຂອງພຣະເຈົ້າໃນ

ທຸກຍຸກສະໄໝ ແລະ ທຸກມື້, ເຖິງວິທີທາງທີ່ພຣະອົງນຳພາຜູ້ຄົນຢູ່ພາຍໃນ, ເຖິງພາລະກິດທີ່ພຣະອົງປະຕິບັດໃນອານາຈັກແຫ່ງວິນຍານ ແລະ ພຣະອົງຈະບອກພວກເຂົາກ່ຽວກັບການເຄື່ອນໄຫວຂອງອານາຈັກແຫ່ງວິນຍານ. ມີແຕ່ເມື່ອນັ້ນເທົ່ານັ້ນ ມັນຈຶ່ງຈະເປັນຍຸກແຫ່ງພຣະທຳຢ່າງແທ້ຈິງ; ຕອນນີ້ມັນພຽງແຕ່ຢູ່ໃນສະພາວະຄືດັ່ງນົກນ້ອຍທີ່ເກີດໃໝ່ເທົ່ານັ້ນ. ຖ້າຫາກຜູ້ຄົນຍັງບໍ່ໄດ້ຖືກເຮັດໃຫ້ສົມບູນ ແລະ ເຮັດໃຫ້ບໍລິສຸດ, ພວກເຂົາກໍຈະບໍ່ມີຫົນທາງທີ່ຈະດຳລົງຊີວິດຢູ່ເທິງແຜ່ນດິນໂລກນີ້ໄດ້ເປັນເວລາໜຶ່ງພັນປີ ແລະ ເນື້ອໜັງຂອງພວກເຂົາກໍຈະສະຫລາຍໄປຢ່າງຫຼີກເວັ້ນບໍ່ໄດ້; ຖ້າຜູ້ຄົນໄດ້ຖືກເຮັດໃຫ້ບໍລິສຸດຢູ່ພາຍໃນ ແລະ ພວກເຂົາບໍ່ໄດ້ຢູ່ກັບຊາຕານ ແລະ ຢູ່ຝ່າຍເນື້ອໜັງອີກຕໍ່ໄປ, ພວກເຂົາກໍຈະຍັງຄົງມີຊີວິດຢູ່ເທິງແຜ່ນດິນໂລກນີ້ຕໍ່ໄປ. ໃນຂັ້ນຕອນນີ້ ເຈົ້າຍັງເປັນຄົນຕາບອດຢູ່ ແລະ ສິ່ງທີ່ພວກເຈົ້າຜະເຊີນເປັນພຽງການຮັກພຣະເຈົ້າ ແລະ ການເປັນປະຈັກພະຍານໃຫ້ກັບພຣະອົງທຸກໆມື້ ທີ່ພວກເຈົ້າມີຊີວິດຢູ່ເທິງແຜ່ນດິນໂລກນີ້.

"ອານາຈັກພັນປີມາຮອດແລ້ວ" ແມ່ນຄຳທຳນາຍ, ມັນຄ້າຍຄືກັບການທຳນາຍຂອງຜູ້ປະກາດພຣະທຳ ເຊິ່ງເປັນໜຶ່ງໃນສິ່ງທີ່ພຣະເຈົ້າໄດ້ທຳນາຍໄວ້ແລ້ວວ່າ ມັນຈະເກີດຂຶ້ນໃນອະນາຄົດ. ພຣະທຳທີ່ພຣະເຈົ້າກ່າວໃນອະນາຄົດ ແລະ ພຣະທຳທີ່ພຣະອົງກ່າວໃນມື້ນີ້ບໍ່ແມ່ນອັນດຽວກັນ: ພຣະທຳແຫ່ງອະນາຄົດຈະນຳພາຍຸກ, ສ່ວນພຣະທຳທີ່ພຣະອົງກ່າວໃນມື້ນີ້ເຮັດໃຫ້ຜູ້ຄົນສົມບູນ, ຫຼໍ່ຫຼອມພວກເຂົາ ແລະ ຈັດການກັບພວກເຂົາ. ຍຸກແຫ່ງພຣະທຳໃນອະນາຄົດ ແມ່ນຕ່າງກັນກັບຍຸກແຫ່ງພຣະທຳໃນປັດຈຸບັນ. ໃນປັດຈຸບັນ ພຣະທຳທຸກຂໍ້ທີ່ກ່າວໂດຍພຣະເຈົ້າ ບໍ່ວ່າພຣະອົງຈະກ່າວພຣະທຳດ້ວຍວິທີໃດກໍຕາມ ກໍແມ່ນເພື່ອເຮັດໃຫ້ຜູ້ຄົນສົມບູນ, ເພື່ອຊຳລະລ້າງສິ່ງສົກກະປົກທີ່ຢູ່ພາຍໃນພວກເຂົາ, ເພື່ອເຮັດໃຫ້ພວກເຂົາບໍລິສຸດ ແລະ ເຮັດໃຫ້ພວກເຂົາເປັນຄົນຊອບທຳຢູ່ຕໍ່ໜ້າພຣະເຈົ້າ. ພຣະທຳທີ່ໄດ້ກ່າວໃນມື້ນີ້ ແລະ ພຣະທຳທີ່ໄດ້ກ່າວໃນອະນາຄົດ ແມ່ນສອງສິ່ງທີ່ແຕກຕ່າງກັນ. ພຣະທຳທີ່ໄດ້ກ່າວໃນຍຸກແຫ່ງລາຊະອານາຈັກແມ່ນເພື່ອເຮັດໃຫ້ຜູ້ຄົນເຂົ້າສູ່ການຝຶກຝົນທັງໝົດ, ເພື່ອນຳຜູ້ຄົນໄປສູ່ເສັ້ນທາງທີ່ຖືກຕ້ອງໃນທຸກສິ່ງ, ເພື່ອປັດເປົ່າທຸກສິ່ງທີ່ບໍ່ບໍລິສຸດໃນຕົວຂອງພວກເຂົານັ້ນອອກ. ນີ້ຄືສິ່ງທີ່ພຣະເຈົ້າປະຕິບັດໃນຍຸກນີ້. ພຣະອົງສ້າງພື້ນຖານພຣະທຳຂອງພຣະອົງໃນທຸກຄົນ, ພຣະອົງເຮັດໃຫ້ພຣະທຳຂອງພຣະອົງເປັນຊີວິດຂອງທຸກຄົນ ແລະ ພຣະອົງໄດ້ໃຊ້ພຣະທຳຂອງພຣະອົງເພື່ອໃຫ້ຄວາມສະຫວ່າງ ແລະ ນຳພາພວກເຂົາຢູ່ພາຍໃນຕະຫຼອດເວລາ. ເມື່ອພວກເຂົາບໍ່ໃສ່ໃຈຕໍ່ຄວາມປະສົງຂອງພຣະເຈົ້າ, ພຣະທຳຂອງພຣະເຈົ້າກໍຈະສະຖິດຢູ່ພາຍໃນພວກເຂົາ ເພື່ອຕຳນິ ແລະ ລົງວິໄນພວກເຂົາ. ພຣະທຳໃນປັດຈຸບັນຈະເປັນຊີວິດຂອງມະນຸດ; ພຣະທຳເຫລົ່ານີ້ລ້ວນແຕ່ສະໜອງໂດຍກົງຕໍ່ຄວາມຕ້ອງການທັງໝົດຂອງມະນຸດ, ທຸກສິ່ງທີ່ເຈົ້າຂາດເຂີນຢູ່ພາຍໃນແມ່ນໄດ້ຖືກສະໜອງໃຫ້ໂດຍພຣະທຳຂອງພຣະເຈົ້າ ແລະ ທຸກຄົນທີ່ຍອມຮັບເອົາພຣະທຳຂອງພຣະເຈົ້າກໍຈະໄດ້ຮັບຄວາມສະຫວ່າງໂດຍການກິນ ແລະ ດື່ມພຣະທຳຂອງພຣະອົງ. ພຣະທຳທີ່ພຣະເຈົ້າກ່າວໃນອະນາຄົດນຳພາຜູ້ຄົນທົ່ວທັງຈັກກະວານ; ໃນປັດຈຸບັນ, ພຣະທຳເຫຼົ່ານີ້ແມ່ນໄດ້ກ່າວຢູ່ໃນປະເທດຈີນເທົ່ານັ້ນ ແລະ ພຣະທຳເຫຼົ່ານັ້ນບໍ່ແມ່ນຕົວແທນຂອງພຣະທຳທີ່ໄດ້ກ່າວຢູ່ທົ່ວທັງຈັກກະວານ. ພຣະເຈົ້າຈະພຽງແຕ່ກ່າວຕໍ່ທົ່ວຈັກກະວານ ເມື່ອອານາຈັກ

ພັນປີມາເຖິງ. ຈົ່ງຮູ້ໄວ້ວ່າພຣະທຳທີ່ກ່າວໂດຍພຣະເຈົ້າໃນປັດຈຸບັນ ທັງໝົດແມ່ນເພື່ອເຮັດໃຫ້ຜູ້ຄົນສົມບູນ; ພຣະທຳທີ່ໄດ້ກ່າວໂດຍພຣະເຈົ້າໃນຂັ້ນຕອນນີ້ແມ່ນເພື່ອສະໜອງຕໍ່ຄວາມຕ້ອງການຂອງຜູ້ຄົນ, ບໍ່ແມ່ນເພື່ອເຮັດໃຫ້ເຈົ້າຮູ້ເຖິງຄວາມລຶກລັບ ຫຼື ເຫັນຄວາມມະຫັດສະຈັນຂອງພຣະເຈົ້າ. ການທີ່ພຣະອົງກ່າວຜ່ານຫຼາຍວິທີທາງ ແມ່ນເພື່ອສະໜອງໃຫ້ແກ່ຄວາມຕ້ອງການຂອງຜູ້ຄົນ. ຍຸກແຫ່ງອານາຈັກພັນປີຍັງບໍ່ທັນມາເຖິງ, ຍຸກແຫ່ງອານາຈັກພັນປີທີ່ກ່າວເຖິງນີ້ແມ່ນມື້ແຫ່ງຄວາມສະຫງ່າລາສີຂອງພຣະເຈົ້າ. ພາຍຫລັງພາລະກິດຂອງພຣະເຢຊູໃນຢູດາຍສິ້ນສຸດລົງ, ພຣະເຈົ້າກໍໄດ້ໂອນພາລະກິດຂອງພຣະອົງໄປສູ່ປະເທດຈີນແຜ່ນດິນໃຫຍ່ ແລະ ໄດ້ສ້າງຕັ້ງແຜນການອື່ນໆຂຶ້ນມາ. ພຣະອົງໄດ້ປະຕິບັດພາລະກິດສ່ວນອື່ນອີກຢູ່ໃນຕົວຂອງພວກເຈົ້າ, ພຣະອົງປະຕິບັດພາລະກິດໃນການເຮັດໃຫ້ຜູ້ຄົນສົມບູນດ້ວຍພຣະທຳ ແລະ ພຣະອົງໃຊ້ພຣະທຳເພື່ອເຮັດໃຫ້ຜູ້ຄົນໄດ້ຮັບຄວາມເຈັບປວດແສນສາຫັດ ພ້ອມທັງໄດ້ຮັບພຣະຄຸນຂອງພຣະເຈົ້າຢ່າງຫຼວງຫຼາຍ. ຂັ້ນຕອນນີ້ຂອງພາລະກິດຈະສ້າງກຸ່ມຜູ້ເອົາຊະນະ ແລະ ພາຍຫລັງທີ່ພຣະອົງໄດ້ສ້າງກຸ່ມຜູ້ເອົາຊະນະນີ້ຂຶ້ນມາແລ້ວ, ພວກເຂົາກໍຈະສາມາດເປັນພະຍານຕໍ່ການກະທຳຂອງພຣະອົງ, ພວກເຂົາຈະສາມາດມີຊີວິດຢູ່ຕາມຄວາມເປັນຈິງ ແລະ ພວກເຂົາຈະເຮັດໃຫ້ພຣະອົງເພິ່ງພໍໃຈຢ່າງແທ້ຈິງ ແລະ ຈົງຮັກພັກດີຕໍ່ພຣະອົງໄປຈົນຕາຍ ແລະ ດ້ວຍວິທີນີ້ພຣະເຈົ້າຈະໄດ້ຮັບສະຫງ່າລາສີ. ເມື່ອພຣະເຈົ້າໄດ້ຮັບສະຫງ່າລາສີ ເຊິ່ງນັ້ນກໍຄື ເມື່ອພຣະອົງໄດ້ເຮັດໃຫ້ຄົນກຸ່ມນີ້ສົມບູນ ນັ້ນກໍຈະເປັນຍຸກແຫ່ງອານາຈັກພັນປີ.

ພຣະເຢຊູຢູ່ເທິງແຜ່ນດິນໂລກນີ້ເປັນເວລາສາມສິບສາມປີເຄິ່ງ, ພຣະອົງມາປະຕິບັດພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນ ແລະ ຜ່ານການຖືກຄຶງໃສ່ໄມ້ກາງແຂນນັ້ນ ພຣະເຈົ້າໄດ້ຮັບໜຶ່ງສ່ວນຂອງຄວາມສະຫງ່າລາສີຂອງພຣະອົງ. ເມື່ອພຣະເຈົ້າສະຖິດເຂົ້າສູ່ເນື້ອໜັງ ພຣະອົງສາມາດທີ່ຈະອ່ອນນ້ອມ ແລະ ລີ້ລັບ ແລະ ສາມາດທົນທຸກທໍລະມານໄດ້ຢ່າງຫຼວງຫຼາຍ. ເຖິງແມ່ນວ່າພຣະອົງເປັນພຣະເຈົ້າເອງ, ພຣະອົງກໍຍັງຕ້ອງອົດທົນຕໍ່ຄວາມອັບອາຍທຸກຢ່າງ ແລະ ທຸກການຂົ່ມເຫັງ ແລະ ພຣະອົງອົດທົນຕໍ່ຄວາມເຈັບປວດແສນສາຫັດໃນການຖືກຄຶງໃສ່ໄມ້ກາງແຂນເພື່ອໃຫ້ສຳເລັດພາລະກິດການໄຖ່ບາບ. ພາຍຫລັງທີ່ພາລະກິດໃນໄລຍະນີ້ສິ້ນສຸດລົງ, ເຖິງແມ່ນວ່າ ຜູ້ຄົນໄດ້ເຫັນວ່າ ພຣະເຈົ້າໄດ້ຮັບຄວາມສະຫງ່າລາສີອັນຍິ່ງໃຫຍ່ກໍຕາມ, ສິ່ງນີ້ກໍບໍ່ໄດ້ແມ່ນຄວາມສະຫງ່າລາສີທັງໝົດຂອງພຣະອົງ; ມັນເປັນພຽງຄວາມສະຫງ່າລາສີສ່ວນໜຶ່ງຂອງພຣະອົງເທົ່ານັ້ນ ເຊິ່ງພຣະອົງໄດ້ຮັບຈາກພຣະເຢຊູ. ເຖິງແມ່ນວ່າ ພຣະເຢຊູຈະສາມາດທົນທຸກຕໍ່ຄວາມຍາກລຳບາກນາໆປະການກໍຕາມ, ສາມາດອ່ອນນ້ອມ ແລະ ລີ້ລັບ, ຖືກຄຶງໃສ່ໄມ້ກາງແຂນເພື່ອພຣະເຈົ້າ, ພຣະເຈົ້າກໍພຽງແຕ່ໄດ້ຮັບຄວາມສະຫງ່າລາສີສ່ວນໜຶ່ງຂອງພຣະອົງເທົ່ານັ້ນ ແລະ ຄວາມສະຫງ່າລາສີຂອງພຣະອົງໃນອິດສະຣາເອນ. ພຣະເຈົ້າຍັງມີຄວາມສະຫງ່າລາສີສ່ວນອື່ນໆອີກ: ການມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດຢ່າງແທ້ຈິງ ແລະ ສ້າງກຸ່ມຄົນໃຫ້ສົມບູນ. ໃນລະຫວ່າງຂັ້ນຕອນພາລະກິດຂອງພຣະເຢຊູ, ພຣະອົງໄດ້ເຮັດສິ່ງເໜືອທຳມະຊາດ ແຕ່ຂັ້ນຕອນຂອງພາລະກິດດັ່ງກ່າວນັ້ນແມ່ນເພື່ອປະຕິບັດໝາຍສຳຄັນ ແລະ ສິ່ງມະຫັດສະຈັນເທົ່ານັ້ນ. ໂດຍພື້ນຖານແລ້ວ ແມ່ນເພື່ອສະແດງໃຫ້ເຫັນວ່າ ພຣະເຢຊູສາມາດທົນຕໍ່

ຄວາມເຈັບປວດ ແລະ ຖືກຄຶງໃສ່ໄມ້ກາງແຂນເພື່ອພຣະເຈົ້າ, ພຣະເຢຊູສາມາດຮັບເອົາຄວາມເຈັບປວດອັນໃຫຍ່ຫຼວງນັ້ນໄດ້ ຍ້ອນວ່າພຣະອົງຮັກພຣະເຈົ້າ ແລະ ເຖິງແມ່ນວ່າ ພຣະເຈົ້າໄດ້ປະຖິ້ມພຣະອົງ, ພຣະອົງກໍຍັງເຕັມໃຈທີ່ຈະເສຍສະຫຼະຊີວິດຂອງພຣະອົງເພື່ອຄວາມປະສົງຂອງພຣະເຈົ້າ. ພາຍຫຼັງທີ່ພຣະເຈົ້າໄດ້ສຳເລັດພາລະກິດຢູ່ປະເທດອິດສະຣາເອນ ແລະ ພຣະເຢຊູໄດ້ຖືກຕອກໃສ່ໄມ້ກາງແຂນ, ພຣະເຈົ້າກໍ່ໄດ້ຮັບສະຫງ່າລາສີ ແລະ ພຣະອົງໄດ້ເປັນປະຈັກພະຍານຕໍ່ໜ້າຊາຕານ. ພວກເຈົ້າບໍ່ເຄີຍຮູ້ ຫຼື ບໍ່ເຄີຍເຫັນວິທີທີ່ພຣະເຈົ້າໄດ້ກາຍເປັນເນື້ອໜັງຢູ່ປະເທດຈີນ ແລ້ວພວກເຈົ້າຈະສາມາດເຫັນວ່າພຣະເຈົ້າໄດ້ຮັບຄວາມສະຫງ່າລາສີໄດ້ແນວໃດ? ເມື່ອພຣະເຈົ້າປະຕິບັດພາລະກິດແຫ່ງການເອົາຊະນະໃນຕົວພວກເຈົ້າຢ່າງຫຼວງຫຼາຍ ແລະ ພວກເຈົ້າຕັ້ງໝັ້ນ ແລ້ວພາລະກິດໃນຂັ້ນຕອນນີ້ຂອງພຣະເຈົ້າກໍຈະສຳເລັດຜົນ ແລະ ນີ້ກໍເປັນຄວາມສະຫງ່າລາສີສ່ວນໜຶ່ງຂອງພຣະເຈົ້າເຊັ່ນກັນ. ພວກເຈົ້າເຫັນສະເພາະແຕ່ໃນສິ່ງນີ້ ແລະ ພວກເຈົ້າຍັງບໍ່ທັນໄດ້ຖືກເຮັດໃຫ້ສົມບູນໂດຍພຣະເຈົ້າເທື່ອ ແລະ ພວກເຈົ້າບໍ່ໄດ້ມອບຫົວໃຈທັງໝົດໃຫ້ກັບພຣະເຈົ້າເທື່ອ. ພວກເຈົ້າຍັງບໍ່ເຫັນຄວາມສະຫງ່າລາສີທັງໝົດຂອງພຣະເຈົ້າ; ພວກເຈົ້າເຫັນພຽງແຕ່ວ່າ ພຣະເຈົ້າໄດ້ເອົາຊະນະຫົວໃຈຂອງພວກເຈົ້າ, ພວກເຈົ້າຈະບໍ່ສາມາດຈາກພຣະອົງໄປຈັກເທື່ອ ແລະ ຈະຕິດຕາມພຣະອົງໄປຈົນເຖິງທີ່ສຸດ ແລະ ຫົວໃຈຂອງພວກເຈົ້າກໍຈະບໍ່ປ່ຽນແປງ ແລະ ສິ່ງນີ້ຄືຄວາມສະຫງ່າລາສີຂອງພຣະເຈົ້າ. ເຈົ້າເຫັນຄວາມສະຫງ່າລາສີຂອງພຣະເຈົ້າໃນຫຍັງແດ່? ຈາກຜົນພາລະກິດຂອງພຣະອົງໃນຜູ້ຄົນ. ຜູ້ຄົນເຫັນວ່າ ພຣະເຈົ້າໜ້າຮັກຫຼາຍ, ພວກເຂົາມີພຣະເຈົ້າຢູ່ໃນຫົວໃຈຂອງພວກເຂົາ ແລະ ບໍ່ເຕັມໃຈທີ່ຈະຈາກພຣະອົງໄປ ແລະ ນີ້ແມ່ນຄວາມສະຫງ່າລາສີຂອງພຣະເຈົ້າ. ເມື່ອຄວາມເຂັ້ມແຂງຂອງອ້າຍເອື້ອຍນ້ອງຢູ່ໃນຄຣິສຕະຈັກເກີດຂຶ້ນ ແລະ ພວກເຂົາສາມາດຮັກພຣະເຈົ້າຈາກຫົວໃຈຂອງພວກເຂົາ, ເຫັນເຖິງກຳລັງສູງສຸດຂອງພາລະກິດທີ່ພຣະເຈົ້າປະຕິບັດ ແລະ ກຳລັງຂອງພຣະທຳຂອງພຣະເຈົ້າທີ່ບໍ່ມີຫຍັງທຽບທານໄດ້, ເມື່ອພວກເຂົາເຫັນວ່າ ພຣະທຳຂອງພຣະອົງມີອຳນາດ ແລະ ພຣະອົງສາມາດລົງມືປະຕິບັດພາລະກິດຂອງພຣະອົງຢູ່ເມືອງຜີຂອງປະເທດຈີນແຜ່ນດິນໃຫຍ່ໄດ້, ໃນເວລາທີ່ເຖິງແມ່ນວ່າຜູ້ຄົນຈະອ່ອນແອ, ຫົວໃຈຂອງພວກເຂົາກົ້ມລົງຕໍ່ໜ້າພຣະເຈົ້າ ແລະ ພວກເຂົາເຕັມໃຈທີ່ຈະຍອມຮັບເອົາພຣະທຳຂອງພຣະເຈົ້າ ແລະ ເຖິງແມ່ນວ່າ ເມື່ອພວກເຂົາອ່ອນແອ່ ແລະ ບໍ່ຄູ່ຄວນ, ພວກເຂົາກໍຍັງສາມາດເຫັນໄດ້ວ່າ ພຣະທຳຂອງພຣະເຈົ້າ ເປັນສິ່ງທີ່ໜ້າຮັກຫຼາຍ ແລະ ຄູ່ຄວນແກ່ການຊື່ນຊົມຂອງພວກເຂົາ, ແລ້ວນີ້ຄືຄວາມສະຫງ່າລາສີຂອງພຣະເຈົ້າ. ເມື່ອມື້ນັ້ນມາເຖິງ ຜູ້ຄົນກໍໄດ້ຖືກເຮັດໃຫ້ສົມບູບໂດຍພຣະເຈົ້າ ແລະ ສາມາດຍອມຈຳນົນຕໍ່ພຣະອົງ ແລະ ສາມາດເຊື່ອຟັງພຣະເຈົ້າຢ່າງສິ້ນເຊີງ ແລະ ປະຄວາມຫວັງ ແລະ ຊະຕາກຳໄວ້ໃນກຳມືຂອງພຣະເຈົ້າ ແລ້ວຄວາມສະຫງ່າລາສີສ່ວນທີສອງຂອງພຣະເຈົ້າຈຶ່ງຈະຖືກຮັບເອົາຢ່າງສິ້ນເຊີງ ເຊິ່ງນັ້ນໝາຍຄວາມວ່າ ເມື່ອພາລະກິດຂອງພຣະເຈົ້າທີ່ແທ້ຈິງ ໄດ້ຮັບຜົນສຳເລັດທັງໝົດແລ້ວ, ພາລະກິດຂອງພຣະອົງຢູ່ໃນປະເທດຈີນແຜ່ນດິນໃຫຍ່ກໍຈະສິ້ນສຸດລົງ. ເວົ້າອີກຢ່າງໜຶ່ງກໍຄື ເມື່ອຜູ້ທີ່ພຣະເຈົ້າໄດ້ກຳນົດຊະຕາກຳໄວ້ແລ້ວ ແລະ ຜູ້ທີ່ຖືກເລືອກໄດ້ຖືກເຮັດໃຫ້ສົມບູນແລ້ວນັ້ນ, ພຣະເຈົ້າກໍ່ຈະໄດ້ຮັບສະຫງ່າລາສີ. ພຣະເຈົ້າໄດ້ກ່າວວ່າ ພຣະອົງໄດ້ນຳເອົາຄວາມສະຫງ່າລາສີ

ສ່ວນທີສອງຂອງພຣະອົງມາສູ່ທິດຕາເວັນອອກ ແຕ່ສິ່ງນີ້ຍັງບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ. ພຣະເຈົ້າໄດ້ນຳເອົາພາລະກິດຂອງພຣະອົງມາສູ່ທິດຕາເວັນອອກ: ພຣະອົງໄດ້ມາຢູ່ທິດຕາເວັນອອກແລ້ວ ແລະ ນີ້ແມ່ນຄວາມສະຫງ່າລາສີຂອງພຣະເຈົ້າ. ໃນປັດຈຸບັນນີ້, ເຖິງແມ່ນວ່າ ພາລະກິດຂອງພຣະອົງຍັງບໍ່ໄດ້ຖືກເຮັດໃຫ້ສຳເລັດ ຍ້ອນພຣະເຈົ້າໄດ້ຕັດສິນໃຈທີ່ຈະປະຕິບັດ, ມັນຈະຕ້ອງສຳເລັດຢ່າງແນ່ນອນ. ພຣະເຈົ້າໄດ້ຕັດສິນໃຈວ່າ ພຣະອົງຈະເຮັດສຳເລັດພາລະກິດນີ້ຢູ່ໃນປະເທດຈີນ ແລະ ພຣະອົງຕັ້ງໃຈຈະເຮັດໃຫ້ພວກເຈົ້າສົມບູນ. ດັ່ງນັ້ນ, ພຣະອົງຈຶ່ງເຮັດໃຫ້ພວກເຈົ້າບໍ່ມີທາງເລືອກ, ພຣະອົງໄດ້ເອົາຊະນະຫົວໃຈຂອງພວກເຈົ້າແລ້ວ ແລະ ເຈົ້າກໍຕ້ອງໄດ້ສືບຕໍ່ ບໍ່ວ່າເຈົ້າຕ້ອງການ ຫຼື ບໍ່ກໍຕາມ ແລະ ເມື່ອພວກເຈົ້າຖືກຮັບເອົາໂດຍພຣະເຈົ້າ, ພຣະເຈົ້າກໍ່ຈະໄດ້ຮັບສະຫງ່າລາສີ. ໃນປັດຈຸບັນນີ້, ພຣະເຈົ້າຍັງບໍ່ທັນໄດ້ຮັບສະຫງ່າລາສີຢ່າງສົມບູນເທື່ອ ຍ້ອນວ່າ ພວກເຈົ້າຍັງບໍ່ໄດ້ຖືກເຮັດໃຫ້ສົມບູນເທື່ອ. ເຖິງແມ່ນວ່າຫົວໃຈຂອງພວກເຈົ້າໄດ້ກັບມາຫາພຣະເຈົ້າແລ້ວກໍຕາມ ແຕ່ຍັງມີຄວາມອ່ອນແອຫຼາຍຢ່າງຢູ່ໃນເນື້ອໜັງຂອງພວກເຈົ້າ, ພວກເຈົ້າຍັງບໍ່ສາມາດທີ່ຈະເຮັດໃຫ້ພຣະເຈົ້າເພິ່ງພໍໃຈ, ພວກເຈົ້າບໍ່ສາມາດທີ່ຈະເອົາໃຈໃສ່ຕໍ່ຄວາມປະສົງຂອງພຣະເຈົ້າ ແລະ ພວກເຈົ້າຍັງມີສິ່ງທີ່ບໍ່ດີຫຼາຍຢ່າງທີ່ຕ້ອງໄດ້ກຳຈັດອອກຈາກຕົວພວກເຈົ້າ ແລະ ພວກເຈົ້າຕ້ອງຜ່ານການທົດລອງ ແລະ ການຂັດເກົາຫຼາຍຢ່າງ. ມີພຽງທາງນັ້ນ ວິຖີຊີວິດຂອງເຈົ້າຈຶ່ງຈະປ່ຽນແປງ ແລະ ເຈົ້າຈຶ່ງຈະສາມາດຖືກຮັບໂດຍພຣະເຈົ້າ.

# ມີພຽງຄົນທີ່ຮູ້ຈັກພຣະເຈົ້າເທົ່ານັ້ນ ທີ່ສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້

ການທີ່ຈະເຊື່ອໃນພຣະເຈົ້າ ແລະ ຮູ້ຈັກພຣະເຈົ້າແມ່ນຖືກກຳນົດໂດຍສະຫວັນ ແລະ ໄດ້ຮັບການຍອມຮັບຈາກໂລກ ແລະ ໃນມື້ນີ້ ເຊິ່ງຢູ່ໃນຍຸກທີ່ພຣະເຈົ້າຜູ້ຊົງບັງເກີດເປັນມະນຸດກຳລັງປະຕິບັດພາລະກິດຂອງພຣະອົງດ້ວຍພຣະອົງເອງ ເຊິ່ງເປັນເວລາທີ່ດີ ໂດຍສະເພາະໃນການທີ່ຈະຮູ້ຈັກພຣະເຈົ້າ. ການເຮັດໃຫ້ພຣະເຈົ້າພໍພຣະໄທແມ່ນບາງສິ່ງທີ່ສາມາດເຮັດໄດ້ ໂດຍການສ້າງຮາກຖານໃນການເຂົ້າໃຈນໍ້າພຣະໄທຂອງພຣະເຈົ້າ ແລະ ເພື່ອທີ່ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ມັນກໍ່ມີຄວາມຈຳເປັນທີ່ຈະຕ້ອງມີຄວາມຮູ້ບາງຢ່າງກ່ຽວກັບພຣະເຈົ້າ. ຄວາມຮູ້ດັ່ງກ່າວນີ້ກ່ຽວກັບພຣະເຈົ້າ ແມ່ນນິມິດທີ່ຜູ້ທີ່ເຊື່ອໃນພຣະເຈົ້າຕ້ອງມີ; ມັນແມ່ນພື້ນຖານຂອງຄວາມເຊື່ອຂອງມະນຸດທີ່ມີຕໍ່ພຣະເຈົ້າ. ໃນກໍລະນີທີ່ບໍ່ມີຄວາມຮູ້ດັ່ງກ່າວນີ້, ຄວາມເຊື່ອຂອງມະນຸດທີ່ມີຕໍ່ພຣະເຈົ້າຈະຢູ່ໃນສະພາບທີ່ຄຸມເຄືອ ແລະ ໃນທ່າມກາງທິດສະດີທີ່ວ່າງເປົ່າ. ເຖິງແມ່ນວ່າມັນຈະເປັນປະນິທານຂອງຄົນແບບນີ້ທີ່ຕິດຕາມພຣະເຈົ້າ, ພວກເຂົາກໍ່ຈະບໍ່ໄດ້ຮັບຫຍັງເລີຍ. ບັນດາຜູ້ທີ່ບໍ່ໄດ້ຮັບຫຍັງເລີຍຈາກສາຍທານນີ້ແມ່ນຜູ້ທີ່ຈະຖືກກຳຈັດ ເຊິ່ງພວກເຂົາທຸກຄົນແມ່ນຄົນທີ່ເອົາປຽບຜູ້ອື່ນ. ບໍ່ວ່າເຈົ້າພົບກັບພາລະກິດຂອງພຣະເຈົ້າໃນຂັ້ນຕອນໃດກໍຕາມ, ເຈົ້າກໍຄວນໄດ້ຮັບການນຳພາໂດຍນິມິດທີ່ຍິ່ງໃຫຍ່. ບໍ່ສະນັ້ນ, ມັນກໍຈະເປັນສິ່ງທີ່ລຳບາກສຳລັບເຈົ້າທີ່ຈະຍອມຮັບເອົາພາລະກິດໃໝ່ໃນແຕ່ລະຂັ້ນຕອນ, ຍ້ອນວ່າພາລະກິດໃໝ່ຂອງພຣະເຈົ້ານັ້ນເກີນຂີດຄວາມສາມາດຂອງມະນຸດທີ່ຈິນຕະນາການໄດ້ ແລະ ຢູ່ນອກຂອບເຂດຂອງຄວາມຄິດຂອງພວກເຂົາ. ດັ່ງນັ້ນ, ຖ້າບໍ່ມີຜູ້ດູແລທີ່ຄອຍມານຳພາມະນຸດ, ຖ້າບໍ່ມີຜູ້ດູແລທີ່ມາພົວພັນກັນກ່ຽວກັບເລື່ອງຂອງນິມິດ, ມະນຸດກໍບໍ່ສາມາດທີ່ຈະຮັບເອົາພາລະກິດໃໝ່ນີ້. ຖ້າມະນຸດບໍ່ສາມາດຮັບນິມິດຕ່າງໆໄດ້, ເຂົາກໍບໍ່ສາມາດຮັບພາລະກິດໃໝ່ຂອງພຣະເຈົ້າໄດ້ ແລະ ຖ້າມະນຸດບໍ່ເຊື່ອຟັງພາລະກິດໃໝ່ຂອງພຣະເຈົ້າ, ເຂົາກໍຈະບໍ່ສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້ ແລະ ຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າກໍຈະບໍ່ມີຄ່າຫຍັງເລີຍ. ກ່ອນທີ່ມະນຸດຈະປະຕິບັດຕາມພຣະທຳຂອງພຣະເຈົ້າ, ເຂົາຕ້ອງຮູ້ຈັກພຣະທຳຂອງພຣະເຈົ້າ; ເຊິ່ງນັ້ນກໍຄື ເຂົາຕ້ອງເຂົ້າໃຈຄວາມປະສົງຂອງພຣະເຈົ້າ. ດ້ວຍວິທີນີ້ເທົ່ານັ້ນ ຈຶ່ງຈະສາມາດປະຕິບັດຕາມພຣະທຳຂອງພຣະເຈົ້າໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ນີ້ຄືສິ່ງທີ່ທຸກຄົນທີ່ສະແຫວງຫາຄວາມຈິງຕ້ອງມີ ແລະ ມັນກໍຍັງເປັນຂະບວນການທີ່ທຸກຄົນທີ່ພະຍາຍາມຮູ້ຈັກພຣະເຈົ້າຕ້ອງປະສົບ. ຂະບວນການໃນການມາຮູ້ຈັກພຣະທຳຂອງພຣະເຈົ້າແມ່ນຂະບວນການໃນການມາຮູ້ຈັກພຣະເຈົ້າ ແລະ ພາລະກິດຂອງພຣະເຈົ້າ. ສະນັ້ນ, ການຮູ້ຈັກນິມິດຕ່າງໆບໍ່ພຽງແຕ່ອ້າງອີງເຖິງການຮູ້ຈັກມວນມະນຸດຂອງພຣະເຈົ້າຜູ້ຊົງບັງເກີດເປັນມະນຸດ, ແຕ່ຍັງລວມເຖິງການຮູ້ຈັກພຣະທຳ ແລະ ພາລະກິດຂອງພຣະເຈົ້າອີກດ້ວຍ. ຜູ້ຄົນເຂົ້າໃຈຄວາມປະສົງຂອງພຣະເຈົ້າຈາກພຣະທຳຂອງພຣະເຈົ້າ ແລະ ພວກເຂົາຮູ້ຈັກອຸປະນິໄສຂອງພຣະເຈົ້າ ແລະ ສິ່ງທີ່ພຣະເຈົ້າເປັນຈາກພາລະກິດຂອງພຣະເຈົ້າ. ຄວາມເຊື່ອໃນພຣະເຈົ້າແມ່ນບາດກ້າວທຳອິດ

ໃນການຮູ້ຈັກພຣະເຈົ້າ. ຂະບວນການໃນການກ້າວຈາກຄວາມເຊື່ອໃນເບື້ອງຕົ້ນທີ່ມີຕໍ່ພຣະເຈົ້ານີ້ ໄປຫາຄວາມເຊື່ອທີ່ເລິກເຊິ່ງທີ່ສຸດໃນພຣະເຈົ້າ ແມ່ນຂະບວນການຂອງການຮູ້ຈັກພຣະເຈົ້າ, ຂະບວນການໃນການປະສົບກັບພາລະກິດຂອງພຣະເຈົ້າ. ຖ້າເຈົ້າເຊື່ອໃນພຣະເຈົ້າ ພຽງເພື່ອໃຫ້ມີຄວາມເຊື່ອໃນພຣະເຈົ້າເທົ່ານັ້ນ ແລະ ບໍ່ແມ່ນເພື່ອຮູ້ຈັກພຣະອົງ, ຄວາມເຊື່ອຂອງເຈົ້າກໍຈະບໍ່ມີຄວາມຈິງ ແລະ ສັດທາຂອງເຈົ້າກໍຈະບໍ່ສາມາດເປັນສັດທາທີ່ບໍລິສຸດໄດ້ ເຊິ່ງນີ້ເຮັດໃຫ້ບໍ່ມີຂໍ້ສົງໄສໃດໆເລີຍ. ຖ້າໃນຊ່ວງໄລຍະທີ່ມະນຸດໄດ້ປະສົບກັບພາລະກິດຂອງພຣະເຈົ້າ, ເຂົາຈະຄ່ອຍໆຮູ້ຈັກພຣະເຈົ້າ, ຫຼັງຈາກນັ້ນອຸປະນິໄສຂອງເຂົາກໍຈະຄ່ອຍໆປ່ຽນໄປ ແລະ ຄວາມເຊື່ອຂອງເຂົາກໍຈະກາຍເປັນຈິງຫຼາຍຂຶ້ນ. ດ້ວຍວິທີນີ້, ເມື່ອມະນຸດໄດ້ປະສົບຜົນສຳເລັດໃນຄວາມເຊື່ອຂອງເຂົາທີ່ມີຕໍ່ພຣະເຈົ້າ, ເຂົາຈະໄດ້ຮັບພຣະເຈົ້າຢ່າງສົມບູນແບບ. ເຫດຜົນທີ່ເຮັດໃຫ້ພຣະເຈົ້າເຮັດຂະໜາດນັ້ນກໍເພື່ອກາຍເປັນເນື້ອໜັງເປັນຄັ້ງທີສອງ ເພື່ອປະຕິບັດພາລະກິດຂອງພຣະອົງດ້ວຍພຣະອົງເອງ ເພື່ອວ່າ ມະນຸດຈະສາມາດຮູ້ຈັກພຣະອົງ ແລະ ແນມເຫັນພຣະອົງ. ການຮູ້ຈັກພຣະເຈົ້າ[ກ] ແມ່ນຜົນສຸດທ້າຍທີ່ຈະເຮັດສຳເລັດໃນຕອນສະຫຼຸບພາລະກິດຂອງພຣະເຈົ້າ; ມັນແມ່ນເງື່ອນໄຂສຸດທ້າຍທີ່ພຣະເຈົ້າສ້າງຂຶ້ນໃຫ້ມວນມະນຸດ. ເຫດຜົນເປັນຫຍັງພຣະອົງຈິ່ງເຮັດສິ່ງນີ້ ແມ່ນເພື່ອການເປັນພະຍານຄັ້ງສຸດທ້າຍຂອງພຣະອົງ; ພຣະອົງປະຕິບັດພາລະກິດນີ້ກໍເພື່ອວ່າ ໃນທີ່ສຸດແລ້ວ ມະນຸດອາດຈະຫັນມາຫາພຣະອົງຢ່າງສົມບູນແບບ. ມະນຸດສາມາດຮັກພຣະເຈົ້າໄດ້ໂດຍການຮູ້ຈັກພຣະເຈົ້າເທົ່ານັ້ນ ແລະ ເພື່ອທີ່ຈະຮັກພຣະເຈົ້າ ເຂົາຕ້ອງຮູ້ຈັກພຣະເຈົ້າ. ບໍ່ວ່າເຂົາຈະສະແຫວງຫາດ້ວຍວິທີໃດ ຫຼື ສິ່ງທີ່ເຂົາສະແຫວງຫາເພື່ອທີ່ຈະໄດ້ມາຈະແມ່ນສິ່ງຫຍັງກໍຕາມ, ເຂົາຕ້ອງມີຄວາມສາມາດທີ່ຈະຮັບຮູ້ກ່ຽວກັບພຣະເຈົ້າ. ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈິ່ງຈະສາມາດເປັນທີ່ພໍພຣະໄທຂອງພຣະເຈົ້າໄດ້. ໂດຍການຮູ້ຈັກພຣະເຈົ້າເທົ່ານັ້ນ ມະນຸດຈິ່ງຈະສາມາດມີສັດທາທີ່ແທ້ຈິງຕໍ່ພຣະເຈົ້າ ແລະໂດຍການຮູ້ຈັກພຣະເຈົ້າເທົ່ານັ້ນ ເຂົາຈິ່ງຈະສາມາດເຄົາລົບບູຊາ ແລະ ເຊື່ອຟັງພຣະເຈົ້າໄດ້ຢ່າງແທ້ຈິງ. ຜູ້ທີ່ບໍ່ຮູ້ຈັກພຣະເຈົ້າຈະບໍ່ສາມາດເຊື່ອຟັງ ແລະ ເຄົາລົບບູຊາພຣະເຈົ້າໄດ້ຢ່າງແທ້ຈິງ. ການຮູ້ຈັກພຣະເຈົ້າແມ່ນປະກອບມີການຮູ້ຈັກອຸປະນິໄສຂອງພຣະອົງ, ການເຂົ້າໃຈຄວາມປະສົງຂອງພຣະອົງ ແລະ ການຮູ້ຈັກສິ່ງທີ່ພຣະອົງເປັນ. ເຖິງວ່າໃຜຈະຮູ້ຈັກໃນແງ່ມຸມໃດກໍຕາມ, ແຕ່ລະຄົນຕ້ອງຮັບຜົນກຳ ແລະ ຈຳເປັນຕ້ອງມີຄວາມປະສົງທີ່ຈະເຊື່ອຟັງ ເຊິ່ງຖ້າບໍ່ມີສິ່ງນີ້ ກໍຈະບໍ່ມີໃຜທີ່ຈະສາມາດສືບຕໍ່ປະຕິບັດຕາມໄດ້ຈົນເຖິງທີ່ສຸດ. ພາລະກິດຂອງພຣະເຈົ້ານັ້ນຂັດກັນເກີນໄປກັບແນວຄິດຂອງມະນຸດ, ອຸປະນິໄສຂອງພຣະເຈົ້າ ແລະ ສິ່ງທີ່ພຣະອົງເປັນ ແມ່ນຍາກເກີນໄປສຳລັບມະນຸດທີ່ຈະຮູ້ຈັກ ແລະ ທຸກສິ່ງທຸກຢ່າງທີ່ພຣະເຈົ້າກ່າວ ແລະ ກະທຳແມ່ນເປັນສິ່ງທີ່ຍາກເກີນກວ່າທີ່ມະນຸດຈະສາມາດເຂົ້າໃຈໄດ້: ຖ້າວ່າມະນຸດປາດຖະໜາທີ່ຈະຕິດຕາມພຣະເຈົ້າ ແຕ່ຍັງບໍ່ເຕັມໃຈທີ່ຈະເຊື່ອຟັງພຣະອົງ, ມະນຸດກໍຈະບໍ່ໄດ້ຮັບຫຍັງເລີຍ. ນັບແຕ່ການສ້າງໂລກຈົນມາຮອດປັດຈະບັນນີ້, ພຣະເຈົ້າໄດ້ເຮັດພາລະກິດຢ່າງຫຼວງຫຼາຍ ທີ່ເກີນກວ່າທີ່ມະນຸດຈະສາມາດເຂົ້າໃຈໄດ້ ແລະ ມະນຸດນັ້ນ

ກ ຂໍ້ຄວາມຕົ້ນສະບັບອ່ານວ່າ "ພາລະກິດແຫ່ງການຮູ້ຈັກພຣະເຈົ້າ".

ໄດ້ເຫັນວ່າ ມັນເປັນສິ່ງທີ່ຍາກທີ່ຈະຍອມຮັບໄດ້ ແລະ ພຣະເຈົ້າໄດ້ກ່າວໄວ້ຢ່າງຫຼວງຫຼາຍ ຈົນເຮັດໃຫ້ແນວຄິດຂອງມະນຸດນັ້ນຍາກທີ່ຈະແກ້ໄຂໄດ້. ແຕ່ພຣະອົງບໍ່ເຄີຍຢຸດຕິພາລະກິດຂອງພຣະອົງຍ້ອນວ່າມະນຸດມີຂໍ້ຫຍຸ້ງຍາກຫຼາຍເກີນໄປ; ໃນທາງກົງກັນຂ້າມ, ພຣະອົງໄດ້ສືບຕໍ່ເຮັດພາລະກິດ ແລະ ກ່າວພຣະທຳ ແລະ ເຖິງແມ່ນວ່າ "ນັກຮົບ" ຈຳນວນຫຼາຍໄດ້ລົ້ມຕາຍໄປໃນລະຫວ່າງທາງ, ພຣະອົງກໍຍັງຊົງປະຕິບັດພາລະກິດຂອງພຣະອົງຢູ່ ແລະ ຍັງຄົງສືບຕໍ່ໂດຍບໍ່ຢຸດພັກ ເພື່ອເລືອກເອົາກຸ່ມຄົນໜຶ່ງກຸ່ມທີ່ເປັນຄົນທີ່ເຕັມໃຈຍອມຮັບພາລະກິດໃໝ່ຂອງພຣະອົງ. ພຣະອົງບໍ່ມີຄວາມສົງສານຕໍ່ "ວິລະບຸລຸດ" ທີ່ໄດ້ຕາຍໄປ ແລະ ໄດ້ທະນຸຖະໜອມຜູ້ທີ່ຍອມຮັບພາລະກິດໃໝ່ ແລະ ພຣະທຳຂອງພຣະອົງແທນ. ແຕ່ພຣະອົງປະຕິບັດພາລະກິດດ້ວຍວິທີການແບບນີ້ເພື່ອຫຍັງ, ເພື່ອເປັນໄປຕາມແຕ່ລະຂັ້ນຕອນບໍ? ເປັນຫຍັງພຣະອົງຊົງກຳຈັດຄົນບາງຄົນ ແລະ ເລືອກເອົາຄົນອື່ນໆສະເໝີ? ເປັນຫຍັງພຣະອົງຊົງໃຊ້ວິທີການແບບນັ້ນເລື້ອຍໆ? ຈຸດປະສົງຂອງພາລະກິດຂອງພຣະອົງແມ່ນເພື່ອເຮັດໃຫ້ມະນຸດໄດ້ຮູ້ຈັກພຣະອົງ ແລະ ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ພຣະອົງຮັບເອົາ. ຫຼັກການຂອງພາລະກິດຂອງພຣະອົງຄືການເຮັດພາລະກິດໃນຜູ້ທີ່ສາມາດຍອມຮັບພາລະກິດທີ່ພຣະອົງກະທຳໃນປັດຈຸບັນນີ້ ແລະ ບໍ່ແມ່ນເຮັດພາລະກິດໃນຜູ້ທີ່ຍອມຮັບພາລະກິດທີ່ພຣະອົງໄດ້ເຮັດໃນອະດີດ ໃນຂະນະທີ່ຍັງຕໍ່ຕ້ານພາລະກິດທີ່ພຣະອົງເຮັດໃນປັດຈຸບັນ. ນີ້ແມ່ນເຫດຜົນວ່າ ເປັນຫຍັງພຣະອົງໄດ້ຊົງກຳຈັດຜູ້ຄົນຢ່າງຫຼວງຫຼາຍ.

ບົດຮຽນໃນການຮູ້ຈັກພຣະເຈົ້າແມ່ນບໍ່ສາມາດບັນລຸຜົນໄດ້ໃນໜຶ່ງ ຫຼື ສອງມື້: ມະນຸດຕ້ອງສະສົມປະສົບການ, ປະເຊີນກັບຄວາມທຸກທໍລະມານ ແລະ ຍອມຮັບຢ່າງແທ້ຈິງ. ກ່ອນອື່ນໝົດ, ໃຫ້ເລີ່ມຈາກພາລະກິດ ແລະ ພຣະທຳຂອງພຣະເຈົ້າ. ມັນຈຳເປັນທີ່ເຈົ້າຈະຕ້ອງເຂົ້າໃຈສິ່ງທີ່ມີຢູ່ໃນຄວາມຮູ້ກ່ຽວກັບພຣະເຈົ້າ, ວິທີໄດ້ຮັບຄວາມຮູ້ນີ້ ແລະ ວິທີແນມເຫັນພຣະເຈົ້າໃນປະສົບການຂອງເຈົ້າ. ນີ້ແມ່ນສິ່ງທີ່ທຸກຄົນຕ້ອງປະຕິບັດເມື່ອພວກເຂົາຍັງບໍ່ທັນໄດ້ຮູ້ຈັກພຣະເຈົ້າເທື່ອ. ບໍ່ມີໃຜສາມາດເຂົ້າໃຈພາລະກິດ ແລະ ພຣະທຳຂອງພຣະເຈົ້າໄດ້ໃນຄາວດຽວ ແລະ ບໍ່ມີໃຜສາມາດໄດ້ຮັບຄວາມຮູ້ທັງໝົດ ກ່ຽວກັບພຣະເຈົ້າ ພາຍໃນເວລາອັນສັ້ນ. ມັນມີຂະບວນການດ້ານປະສົບການທີ່ຈຳເປັນ ເຊິ່ງຖ້າບໍ່ມີສິ່ງນີ້ ກໍຈະບໍ່ມີໃຜສາມາດຮູ້ຈັກພຣະເຈົ້າ ແລະ ຕິດຕາມພຣະອົງໄດ້ຢ່າງຈິງໃຈ. ຍິ່ງພຣະເຈົ້າເຮັດພາລະກິດຂອງພຣະອົງຫຼາຍເທົ່າໃດ, ມະນຸດກໍຍິ່ງຮູ້ຈັກພຣະອົງຫຼາຍຂຶ້ນເທົ່ານັ້ນ. ຍິ່ງພາລະກິດຂອງພຣະເຈົ້າຂັດແຍ້ງກັບແນວຄິດຂອງມະນຸດຫຼາຍເທົ່າໃດ, ຄວາມຮູ້ຂອງມະນຸດທີ່ມີຕໍ່ພຣະອົງກໍຍິ່ງໄດ້ຮັບການຟື້ນຟູ ແລະ ມີຄວາມເລິກເຊິ່ງຂຶ້ນເທົ່ານັ້ນ. ຖ້າພາລະກິດຂອງພຣະເຈົ້າແມ່ນເພື່ອໃຫ້ຄົງຢູ່ຕະຫຼອດໄປ ແລະ ບໍ່ສາມາດປ່ຽນແປງໄດ້, ຄວາມຮູ້ຂອງມະນຸດກ່ຽວກັບພຣະອົງກໍຈະບໍ່ມີຫຼາຍ. ໃນລະຫວ່າງໄລຍະເວລາຂອງການຊົງສ້າງ ແລະ ປັດຈຸບັນ, ສິ່ງທີ່ພຣະເຈົ້າໄດ້ກະທຳໃນຍຸກແຫ່ງພຣະບັນຍັດ, ສິ່ງທີ່ພຣະເຈົ້າໄດ້ກະທຳໃນຍຸກແຫ່ງພຣະຄຸນ ແລະ ສິ່ງທີ່ພະອົງໄດ້ກະທຳໃນຍຸກແຫ່ງອານາຈັກ ພວກເຈົ້າຕ້ອງມີຄວາມຊັດເຈນກ່ຽວກັບນິມິດເຫຼົ່ານີ້. ພວກເຈົ້າຕ້ອງຮູ້ຈັກພາລະກິດຂອງພຣະເຈົ້າ. ພາຍຫຼັງທີ່ໄດ້ຕິດຕາມພຣະເຢຊູເທົ່ານັ້ນ ເປໂຕຈຶ່ງໄດ້ຄ່ອຍຮູ້ຈັກກ່ຽວກັບພາລະກິດທີ່ພຣະວິນຍານບໍລິສຸດໄດ້ກະທຳໃນພຣະເຢຊູ. ລາວໄດ້ເວົ້າວ່າ: "ອີງໃສ່ປະສົບການຂອງມະນຸດນັ້ນບໍ່ພຽງພໍເພື່ອທີ່ຈະໄດ້ຄວາມຮູ້

ທີ່ສົມບູນແບບ; ຕ້ອງມີສິ່ງໃໝ່ໆຫຼາຍໆຢ່າງຈາກພາລະກິດຂອງພຣະເຈົ້າ ເພື່ອຊ່ວຍພວກເຮົາໃຫ້ຮູ້ຈັກພຣະອົງ". ໃນເບື້ອງຕົ້ນ, ເປໂຕເຊື່ອວ່າ ພຣະເຢຊູແມ່ນຜູ້ທີ່ພຣະເຈົ້າສົ່ງມາ, ຄ້າຍຄືກັບອັກຄະສາວົກ ແລະ ເພິ່ນບໍ່ໄດ້ເຫັນວ່າ ພຣະເຢຊູແມ່ນພຣະຄຣິດ. ໃນຕອນນີ້, ເມື່ອເພິ່ນເລີ່ມຕິດຕາມພຣະເຢຊູ, ພຣະເຢຊູກໍໄດ້ຖາມເພິ່ນວ່າ: "ຊີໂມນບາໂຢນາ, ເຈົ້າຈະຕິດຕາມເຮົາບໍ?" ເປໂຕຕອບວ່າ: "ຂ້າພະເຈົ້າຈະຕ້ອງຕິດຕາມຜູ້ທີ່ພຣະບິດາເຈົ້າທີ່ຢູ່ສະຫວັນໄດ້ສົ່ງມາ. ຂ້າພະເຈົ້າຕ້ອງຍອມຮັບຜູ້ທີ່ພຣະວິນຍານບໍລິສຸດເລືອກ. ຂ້າພະເຈົ້າຈະຕິດຕາມພຣະອົງ". ຈາກຄຳເວົ້າເຫຼົ່ານີ້, ມັນສາມາດສະແດງໃຫ້ເຫັນໄດ້ວ່າ ເປໂຕບໍ່ຮູ້ຈັກພຣະເຢຊູເລີຍ; ລາວໄດ້ປະສົບກັບພຣະທຳຂອງພຣະເຈົ້າ, ໄດ້ຈັດການກັບຕົວຂອງລາວເອງ ແລະ ໄດ້ປະສົບກັບຄວາມທຸກທໍລະມານເພື່ອພຣະເຈົ້າ, ແຕ່ລາວບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າເລີຍ. ຫຼັງປະສົບໄປໄດ້ໄລຍະໜຶ່ງ, ເປໂຕໄດ້ແນມເຫັນການກະທຳຫຼາຍຢ່າງຂອງພຣະເຈົ້າໃນຕົວຂອງພຣະເຢຊູ, ລາວໄດ້ເຫັນຄວາມໜ້າຮັກຂອງພຣະເຈົ້າ ແລະ ລາວໄດ້ແນມເຫັນຕົວຕົນຂອງພຣະເຈົ້າໃນພຣະເຢຊູຫຼາຍຂຶ້ນ. ລາວຍັງໄດ້ແນມເຫັນອີກວ່າ ພຣະທຳທີ່ພຣະເຢຊູໄດ້ກ່າວອອກໄປແມ່ນສິ່ງທີ່ມະນຸດບໍ່ສາມາດກ່າວອອກໄດ້ ແລະ ພາລະກິດທີ່ພຣະເຊຢູໄດ້ກະທຳບໍ່ແມ່ນສິ່ງທີ່ມະນຸດສາມາດເຮັດໄດ້. ຍິ່ງໄປກວ່ານັ້ນ, ໃນພຣະທຳ ແລະ ການກະທຳຂອງພຣະເຢຊູ, ເປໂຕໄດ້ເຫັນຄວາມສະຫຼຽວສະຫຼາດຂອງພຣະເຈົ້າຫຼາຍຂຶ້ນ ແລະ ເຫັນພາລະກິດທີ່ມີລັກສະນະສັກສິດຫຼາຍຂຶ້ນ. ໃນຊ່ວງປະສົບການຂອງລາວ, ລາວບໍ່ພຽງແຕ່ຮູ້ຈັກຕົວຂອງພຣະອົງເທົ່ານັ້ນ, ແຕ່ຍັງໄດ້ເອົາໃຈໃສ່ຢ່າງໃກ້ຊິດຕໍ່ທຸກໆການກະທຳຂອງພຣະເຢຊູ ເຊິ່ງລາວໄດ້ຄົ້ນພົບສິ່ງໃໝ່ຢ່າງຫຼວງຫຼາຍ, ເປັນຕົ້ນແມ່ນມີການສະແດງອອກຢ່າງຫຼວງຫຼາຍຂອງພຣະເຈົ້າທີ່ແທ້ຈິງ ໃນພາລະກິດທີ່ພຣະເຈົ້າໄດ້ຊົງກະທຳຜ່ານທາງພຣະເຢຊູ ແລະ ພຣະເຢຊູນັ້ນຍັງແຕກຕ່າງຈາກຄົນທຳມະດາ ທາງດ້ານວາຈາທີ່ພຣະອົງໄດ້ກ່າວ ແລະ ການກະທຳທີ່ພຣະອົງໄດ້ຊົງກະທຳ ເຊັ່ນດຽວກັນກັບວິທີການທີ່ພຣະອົງນຳພາຄຣິດຕະຈັກ ແລະ ພາລະກິດທີ່ພະອົງໄດ້ຊົງປະຕິບັດ. ສະນັ້ນ, ເປໂຕຈຶ່ງໄດ້ຮຽນຮູ້ບົດຮຽນຫຼາຍຢ່າງທີ່ລາວຕ້ອງໄດ້ຮຽນຮູ້ຈາກພຣະເຢຊູ ແລະ ເມື່ອເຖິງເວລາທີ່ພຣະເຢຊູກຳລັງຈະຖືກຄຶງໃສ່ໄມ້ກາງແຂນ, ລາວກໍໄດ້ຮັບຄວາມຮູ້ຈຳນວນໜຶ່ງກ່ຽວກັບພຣະເຢຊູ ເຊິ່ງເປັນຄວາມຮູ້ທີ່ກາຍເປັນພື້ນຖານຂອງຄວາມຈົງຮັກພັກດີຕະຫຼອດຊີວິດຂອງລາວທີ່ມີຕໍ່ພຣະເຢຊູ ແລະ ການຖືກຄຶງກາງແຂນຢ່ອນຫົວລົງຂອງລາວທີ່ລາວໄດ້ທົນທຸກເພື່ອພຣະຜູ້ເປັນເຈົ້າ. ເຖິງແມ່ນວ່າລາວຈະມີແນວຄິດບາງຢ່າງ ແລະ ບໍ່ໄດ້ມີຄວາມຮູ້ທີ່ຊັດເຈນກ່ຽວກັບພຣະເຢຊູໃນເບື້ອງຕົ້ນ, ສິ່ງເຫຼົ່ານັ້ນແມ່ນພາກສ່ວນໜຶ່ງຂອງຄົນເສື່ອມຊາມທີ່ບໍ່ສາມາດຫຼີກລ່ຽງໄດ້. ໃນຂະນະທີ່ພຣະເຢຊູກຳລັງຈະຈາກໄປ, ພຣະອົງໄດ້ບອກກັບເປໂຕວ່າ ການຄຶງກາງແຂນຂອງພຣະອົງນັ້ນ ແມ່ນພາລະກິດທີ່ພຣະອົງຕ້ອງໄດ້ເຮັດ: ມັນມີຄວາມຈຳເປັນທີ່ຍຸກສະໄໝດັ່ງກ່າວຕ້ອງປະຖິ້ມພຣະອົງ ແລະ ຍຸກທີ່ບໍ່ບໍລິສຸດ ແລະ ເກົ່າແກ່ນີ້ຕ້ອງຄຶງພຣະອົງໃສ່ໄມ້ກາງແຂນ; ພຣະອົງໄດ້ຈຸດຕິລົງມາເພື່ອເຮັດພາລະກິດການໄຖ່ບາບໃຫ້ສຳເລັດ ແລະ ເມື່ອພາລະກິດນີ້ໄດ້ສຳເລັດ, ພາລະກິດຂອງພຣະອົງກໍຈະສິ້ນສຸດລົງ. ເມື່ອໄດ້ຍິນດັ່ງນີ້, ເປໂຕກໍມີຄວາມອຸກທຸກໃຈ ແລະ ຍຶດຕິດກັບພຣະເຢຊູຫຼາຍຂຶ້ນ. ເມື່ອພຣະເຢຊູຖືກຄຶງໃສ່ໄມ້ກາງແຂນ, ເປໂຕໄດ້ຮ້ອງໄຫ້ຢ່າງຂົມຂື່ນຢູ່ຄົນດຽວ. ກ່ອນໜ້າ

ນີ້, ລາວໄດ້ຖາມພຣະເຢຊູວ່າ: "ພຣະຜູ້ເປັນເຈົ້າເອີຍ! ພຣະອົງເວົ້າວ່າ ພຣະອົງຈະຕ້ອງຖືກຄຶງໃສ່ໄມ້ກາງແຂນ. ຫຼັງຈາກທີ່ພຣະອົງຈາກໄປແລ້ວ, ເມື່ອໃດທີ່ພວກເຮົາຈຶ່ງຈະໄດ້ເຫັນພຣະອົງອີກ?" ໃນຄຳເວົ້າຂອງລາວແມ່ນບໍ່ໄດ້ມີອົງປະກອບທີ່ບໍ່ບໍລິສຸດຢູ່? ບໍ່ມີແນວຄິດອື່ນໆທີ່ປະສົມເຂົ້າໃນຄຳເວົ້າເຫຼົ່ານີ້ບໍ? ໃນໃຈຂອງລາວ, ລາວຮູ້ວ່າ ພຣະເຢຊູໄດ້ຈຸດຕິລົງມາເພື່ອເຮັດໃຫ້ພາລະກິດຂອງພຣະເຈົ້າສ່ວນໃດໜຶ່ງໃຫ້ສຳເລັດ ແລະ ພາຍຫຼັງທີ່ພຣະເຢຊູໄດ້ຈາກໄປແລ້ວ, ພຣະວິນຍານບໍລິສຸດຈະຢູ່ກັບລາວ; ເຖິງແມ່ນວ່າພຣະອົງຈະຖືກຄຶງໃສ່ໄມ້ກາງແຂນ ແລະ ສະເດັດຂຶ້ນສະຫວັນ, ຢ່າງໃດກໍຕາມ, ພຣະວິນຍານຂອງພຣະເຈົ້າຈະຢູ່ກັບລາວ. ໃນເວລານັ້ນ, ເປໂຕໄດ້ຄວາມຮູ້ບາງຢ່າງກ່ຽວກັບພຣະເຢຊູ: ລາວຮູ້ວ່າພຣະເຢຊູໄດ້ຖືກສົ່ງມາໂດຍພຣະວິນຍານຂອງພຣະເຈົ້າ, ພຣະວິນຍານຂອງພຣະເຈົ້າແມ່ນຢູ່ໃນພຣະອົງ ແລະ ພຣະເຢຊູກໍແມ່ນພຣະເຈົ້າ, ພຣະອົງແມ່ນພຣະຄຣິດ. ແຕ່ນັ້ນກໍເປັນຍ້ອນຄວາມຮັກທີ່ເພິ່ນມີຕໍ່ພຣະເຢຊູ ແລະ ຍ້ອນຄວາມອ່ອນແອແບບມະນຸດຂອງລາວ, ເປໂຕຈຶ່ງໄດ້ກ່າວຄຳເວົ້າແບບນັ້ນອອກມາ. ໃນທຸກໆຂັ້ນຕອນຂອງພາລະກິດຂອງພຣະເຈົ້າ, ຖ້າເຮົາສາມາດສັງເກດ ແລະ ປະສົບຢ່າງເຈັບປວດ, ຄົນເຮົາກໍຈະຄ່ອຍໆສາມາດຄົ້ນພົບຄວາມໜ້າຮັກຂອງພຣະເຈົ້າ. ໂຊໂລໄດ້ເຮັດຫຍັງສຳລັບນິມິດຂອງລາວ? ເມື່ອພຣະເຢຊູປາກົດຕົວຕໍ່ໜ້າລາວ, ໂຊໂລໄດ້ເວົ້າວ່າ: "ພຣະອົງແມ່ນໃຜ, ພຣະຜູ້ເປັນເຈົ້າ?" ພຣະເຢຊູຕອບວ່າ: "ເຮົາຄືພຣະເຢຊູ ຜູ້ທີ່ເຈົ້າຂົ່ມເຫັງ". ນັ້ນແມ່ນພາບທີ່ໂຊໂລເຫັນ. ເປໂຕຖືເອົາພາບຂອງການຄືນຊີບຂອງພຣະເຢຊູ, ການປາກົດຕົວຂອງພຣະອົງເປັນເວລາ 40 ວັນ ແລະ ການສິດສອນກ່ຽວກັບຊີວິດຂອງພຣະເຢຊູ, ຈົນຮອດບັ້ນທ້າຍຂອງການເດີນທາງຂອງເພິ່ນ.

ມະນຸດປະສົບກັບພາລະກິດຂອງພຣະເຈົ້າ, ໄດ້ມາຮູ້ຈັກໂຕເອງ, ລົບລ້າງອຸປະນິໄສທີ່ບໍ່ດີຂອງຕົນ ແລະ ສະແຫວງຫາການຈະເລີນເຕີບໂຕໃນຊີວິດ, ທັງໝົດນີ້ແມ່ນເພື່ອການຮູ້ຈັກພຣະເຈົ້າ. ຖ້າເຈົ້າພຽງແຕ່ສະແຫວງຫາ ເພື່ອຮູ້ຈັກຕົວເອງ ແລະ ເພື່ອຈັດການກັບອຸປະນິໄສທີ່ບໍ່ດີຂອງຕົວເອງ, ແຕ່ບໍ່ມີຄວາມຮູ້ກ່ຽວກັບສິ່ງທີ່ພຣະເຈົ້າກະທຳຕໍ່ມະນຸດ, ກ່ຽວກັບການໄຖ່ບາບຂອງພຣະອົງນັ້ນຍິ່ງໃຫຍ່ພຽງໃດ ຫຼື ກ່ຽວກັບວິທີທີ່ເຈົ້າປະສົບກັບພາລະກິດຂອງພຣະເຈົ້າ ແລະ ເປັນປະຈັກພະຍານຕໍ່ສິ່ງທີ່ພຣະອົງໄດ້ຊົງກະທຳແລ້ວ, ປະສົບການຂອງເຈົ້ານັ້ນກໍໄຮ້ຄ່າ. ຫາກເຈົ້າຄິດວ່າຊີວິດຂອງຄົນໆໜຶ່ງໄດ້ບັນລຸຄວາມເປັນຜູ້ໃຫຍ່ພຽງຍ້ອນວ່າ ຄົນໆນັ້ນສາມາດນຳເອົາຄວາມຈິງໄປປະຕິບັດ ແລະ ເພື່ອອົດທົນ, ນີ້ກໍໝາຍຄວາມວ່າເຈົ້າຍັງບໍ່ທັນເຂົ້າໃຈຄວາມໝາຍແທ້ຈິງຂອງຊີວິດ ຫຼື ຈຸດປະສົງຂອງພຣະເຈົ້າໃນການເຮັດໃຫ້ມະນຸດສົມບູນ. ໃນມື້ໜຶ່ງ, ເມື່ອເຈົ້າຢູ່ໃນຄຣິດຕະຈັກຕ່າງໆທາງສາສະໜາ, ຢູ່ທ່າມກາງສະມາຊິກຂອງຄຣິດຕະຈັກແຫ່ງການກັບໃຈ ຫຼື ຄຣິດຕະຈັກແຫ່ງຊີວິດ, ເຈົ້າຈະພົບກັບຫຼາຍໆຄົນທີ່ມີສັດທາເຊິ່ງເປັນຜູ້ທີ່ມີຄຳອະທິຖານທີ່ມີ "ນິມິດ" ແລະ ແມ່ນຜູ້ທີ່ຮູ້ສຶກປະທັບໃຈ ແລະ ມີພຣະທຳຊົງນຳພາ ໃນການສະແຫວງຫາຊີວິດຂອງພວກເຂົາ. ຍິ່ງໄປກວ່ານັ້ນ, ພວກເຂົາສາມາດອົດທົນ ແລະ ປະຖິ້ມຕົວພວກເຂົາເອງໄດ້ໃນຫຼາຍໆເລື່ອງ ແລະ ບໍ່ໄດ້ໃຫ້ເນື້ອໜັງເປັນສິ່ງນຳພາ. ໃນເວລານັ້ນ, ເຈົ້າຈະບໍ່ສາມາດບອກຄວາມແຕກຕ່າງໄດ້: ເຈົ້າຈະເຊື່ອວ່າ ທຸກສິ່ງທຸກຢ່າງທີ່ພວກເຂົາປະຕິບັດນັ້ນຖືກຕ້ອງ, ແມ່ນການສະແດງອອກຕາມທຳມະຊາດຂອງຊີວິດ ແລະ ມັນກໍເປັນສິ່ງທີ່ໜ້າເສຍດາຍຫຼາຍ ທີ່ພຣະນາມ

ທີ່ພວກເຂົາເຊື່ອເຖິງນັ້ນບໍ່ຖືກຕ້ອງ. ມຸມມອງແບບນັ້ນມັນບໍ່ໂງ່ງ່າວບໍ? ເປັນຫຍັງຈິ່ງເວົ້າວ່າ ຫຼາຍໆຄົນບໍ່ມີຊີວິດ? ຍ້ອນວ່າພວກເຂົາບໍ່ຮູ້ຈັກພຣະເຈົ້າ ແລະ ດ້ວຍເຫດນັ້ນ ຈຶ່ງມີການເວົ້າວ່າ ພວກເຂົາບໍ່ມີພຣະເຈົ້າຢູ່ໃນຫົວໃຈ ແລະ ບໍ່ມີຊີວິດ. ຖ້າວ່າຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າໄດ້ມາເຖິງຈຸດໜຶ່ງເຊິ່ງເປັນບ່ອນທີ່ເຈົ້າສາມາດຮູ້ເຖິງການກະທຳຂອງພຣະເຈົ້າໄດ້ຢ່າງຖີ່ຖ້ວນ, ຄວາມເປັນຈິງຂອງພຣະເຈົ້າ ແລະ ທຸກໆຂັ້ນຕອນຂອງພາລະກິດຂອງພຣະເຈົ້າ, ແລ້ວຫຼັງຈາກນັ້ນເຈົ້າກໍຈະມີຄວາມຈິງ. ຖ້າເຈົ້າບໍ່ຮູ້ຈັກພາລະກິດ ແລະ ອຸປະນິໄສຂອງພຣະເຈົ້າ, ນັ້ນສະແດງວ່າ ຍັງມີບາງຢ່າງທີ່ຂາດຫາຍໄປໃນປະສົບການຂອງເຈົ້າ. ພຣະເຢຊູປະຕິບັດຂັ້ນຕອນນັ້ນໃນພາລະກິດຂອງພຣະອົງແນວໃດ, ຂັ້ນຕອນນັ້ນໄດ້ຖືກປະຕິບັດແນວໃດ, ພຣະເຈົ້າໄດ້ປະຕິບັດພາລະກິດຂອງພຣະອົງໃນຍຸກແຫ່ງພຣະຄຸນແນວໃດ ແລະ ພາລະກິດໃດທີ່ສຳເລັດ, ພາລະກິດໃດທີ່ກຳລັງຖືກເຮັດໃຫ້ສຳເລັດໃນຂັ້ນຕອນນີ້ ເຊິ່ງຖ້າຫາກວ່າເຈົ້າບໍ່ມີຄວາມຮູ້ຢ່າງເລິກເຊິ່ງກ່ຽວກັບສິ່ງເຫຼົ່ານີ້, ເຈົ້າຈະບໍ່ຮູ້ສຶກໝັ້ນໃຈ ແລະ ເຈົ້າຈະບໍ່ຮູ້ສຶກປອດໄພຢູ່ຕະຫຼອດ. ພາຍຫຼັງໄດ້ປະສົບໃນໄລຍະໜຶ່ງ, ຖ້າເຈົ້າສາມາດຮູ້ຈັກພາລະກິດທີ່ເຮັດສຳເລັດໂດຍພຣະເຈົ້າ ແລະ ທຸກໆຂັ້ນຕອນຂອງພາລະກິດພຣະອົງແລ້ວ ແລະ ຖ້າເຈົ້າໄດ້ຮັບຄວາມຮູ້ອັນເລິກເຊິ່ງກ່ຽວກັບເປົ້າໝາຍຂອງພຣະເຈົ້າໃນການກ່າວພຣະທຳຂອງພຣະອົງ ແລະ ເປັນຫຍັງຫຼາຍໆພຣະທຳທີ່ພຣະອົງໄດ້ກ່າວບໍ່ໄດ້ຖືກເຮັດໃຫ້ສຳເລັດ, ນັ້ນກໍຈະໝາຍຄວາມວ່າ ເຈົ້າອາດຈະສະແຫວງຫາເສັ້ນທາງຂ້າງໜ້າດ້ວຍຄວາມກ້າຫານ ແລະ ໂດຍທີ່ບໍ່ມີສິ່ງໃດຫ່ວງດຶງໄວ້ ໂດຍປາສະຈາກຄວາມກັງວົນ ແລະ ການປັບແຕ່ງໃດໆ. ພວກເຈົ້າຄວນເຫັນວ່າ ພຣະເຈົ້າໃຊ້ວິທີການໃດ ເພື່ອບັນລຸພາລະກິດຂອງພຣະອົງໄດ້ຫຼາຍປານນີ້. ພຣະອົງໃຊ້ພຣະທຳທີ່ພຣະອົງກ່າວ, ເຮັດໃຫ້ມະນຸດບໍລິສຸດ ແລະ ປ່ຽນແນວຄິດຂອງເຂົາດ້ວຍພຣະທຳທີ່ຫຼາກຫຼາຍ. ຄວາມທຸກທໍລະມານທັງໝົດທີ່ພວກເຈົ້າໄດ້ອົດທົນອົດກັ້ນ, ການເຮັດໃຫ້ເຈົ້າມີຄວາມບໍລິສຸດ, ການຈັດການທີ່ເຈົ້າຍອມຮັບໃນຕົວເຈົ້າເອງ, ການເຫັນແຈ້ງທີ່ເຈົ້າໄດ້ປະສົບກັບ ເຊິ່ງສິ່ງເຫຼົ່ານີ້ແມ່ນໄດ້ເຮັດສຳເລັດໂດຍພຣະທຳທີ່ພຣະເຈົ້າໄດ້ກ່າວ. ມະນຸດຕິດຕາມພຣະເຈົ້າໃນເລື່ອງໃດ? ເຂົາຕິດຕາມຍ້ອນພຣະທຳຂອງພຣະເຈົ້າ! ພຣະທຳຂອງພຣະເຈົ້ານັ້ນແມ່ນລຶກລັບຢ່າງເລິກເຊິ່ງ ແລະ ພວກມັນສາມາດຫັນປ່ຽນຈິດໃຈຂອງມະນຸດ, ເປີດເຜີຍສິ່ງທີ່ຖືກຝັງຢູ່ເລິກພາຍໃນ, ເຮັດໃຫ້ເຂົາຮູ້ຈັກສິ່ງທີ່ເກີດຂຶ້ນໃນອະດີດ ແລະ ເຮັດໃຫ້ເຂົາເຈາະເຂົ້າໄປໃນອະນາຄົດໄດ້. ສະນັ້ນ, ມະນຸດຕ້ອງອົດທົນກັບຄວາມທຸກທໍລະມານ ຍ້ອນພຣະທຳຂອງພຣະເຈົ້າ ແລະ ຍັງຖືກເຮັດໃຫ້ສົມບູນແບບດ້ວຍພຣະທຳຂອງພຣະເຈົ້າເຊັ່ນກັນ: ໃນເວລານີ້ເທົ່ານັ້ນ ທີ່ມະນຸດຕິດຕາມພຣະເຈົ້າ. ສິ່ງທີ່ມະນຸດຄວນເຮັດໃນຂັ້ນຕອນນີ້ຄືການຍອມຮັບພຣະທຳຂອງພຣະເຈົ້າ ແລະ ບໍ່ວ່າເຂົາຈະຖືກເຮັດໃຫ້ສົມບູນແບບ ຫຼື ຕ້ອງຖືກເຮັດໃຫ້ບໍລິສຸດກໍ່ຕາມ, ພຣະທຳຂອງພຣະເຈົ້າແມ່ນມີຄວາມສຳຄັນ. ນີ້ແມ່ນພາລະກິດຂອງພຣະເຈົ້າ ແລະ ນີ້ກໍ່ແມ່ນນິມິດທີ່ມະນຸດຄວນຮູ້ຈັກປັດຈຸບັນ.

ພຣະເຈົ້າເຮັດໃຫ້ມະນຸດສົມບູນແບບດ້ວຍວິທີໃດ? ອຸປະນິໄສຂອງພຣະເຈົ້າແມ່ນຫຍັງ? ອຸປະນິໄສຂອງພຣະອົງແມ່ນມີຫຍັງແນ່? ເພື່ອຊີ້ແຈງສິ່ງທັງໝົດເຫຼົ່ານີ້: ຄົນໜຶ່ງຈະເອີ້ນມັນວ່າ ການເຜີຍແຜ່ພຣະນາມຂອງພຣະເຈົ້າ, ອີກຄົນຈະເອີ້ນມັນວ່າ ເປັນການປະຈັກພະຍານໃຫ້ພຣະເຈົ້າ ແລະ

ອີກຄົນຈະເອີ້ນມັນວ່າ ການສັນລະເສີນພຣະເຈົ້າ. ບົນພື້ນຖານການຮູ້ຈັກກັບພຣະເຈົ້າ, ໃນທີ່ສຸດອຸປະນິໄສໃນຊີວິດຂອງມະນຸດກໍຈະຖືກປ່ຽນແປງ. ຍິ່ງມະນຸດຖືກຈັດການ ແລະ ຖືກເຮັດໃຫ້ບໍລິສຸດຫຼາຍພຽງໃດ, ເຂົາຍິ່ງມີພະລັງຫຼາຍຂຶ້ນເທົ່ານັ້ນ; ຍິ່ງຂັ້ນຕອນພາລະກິດຂອງພຣະເຈົ້າຫຼາຍຂຶ້ນເທົ່າໃດ, ມະນຸດຍິ່ງຖືກເຮັດໃຫ້ສົມບູນແບບຫຼາຍຂຶ້ນເທົ່ານັ້ນ. ໃນປັດຈຸບັນ, ໃນປະສົບການຂອງມະນຸດ, ທຸກຂັ້ນຕອນຂອງພາລະກິດຂອງພຣະເຈົ້າຈະກັບມາຕາມແນວຄິດຂອງເຂົາ ແລະ ເປັນທຸກສິ່ງທີ່ຢູ່ເໜືອຄວາມສະຫຼາດຂອງມະນຸດ ແລະ ຢູ່ນອກເໜືອຄວາມຄາດຫວັງຂອງເຂົາ. ພຣະເຈົ້າສະໜອງທຸກສິ່ງທຸກຢ່າງທີ່ມະນຸດຕ້ອງການ ແລະ ສິ່ງນີ້ແມ່ນຂັດແຍ້ງກັບແນວຄິດຂອງເຂົາໃນທຸກໆດ້ານ. ພຣະເຈົ້າຊົງເອີ່ຍພຣະທຳຂອງພຣະອົງໃນຊ່ວງເວລາທີ່ເຈົ້າອ່ອນແອ; ດ້ວຍວິທີນີ້ເທົ່ານັ້ນ ທີ່ພຣະອົງສາມາດສະໜອງຊີວິດຂອງເຈົ້າ. ໂດຍຍ້ອນກັບໄປທີ່ແນວຄິດຂອງເຈົ້າ, ພຣະອົງຈະເຮັດໃຫ້ເຈົ້າຍອມຮັບໃຫ້ພຣະເຈົ້າຈັດການ; ດ້ວຍວິທີນີ້ເທົ່ານັ້ນ ເຈົ້າຈຶ່ງສາມາດຫຼຸດພົ້ນອອກຈາກຄວາມເສື່ອມຊາມຂອງເຈົ້າໄດ້. ໃນມື້ນີ້, ພຣະເຈົ້າຜູ້ຊົງບັງເກີດເປັນມະນຸດແມ່ນປະຕິບັດພາລະກິດຂອງພຣະອົງໃນສະພາບຂອງພຣະເຈົ້າໃນດ້ານໜຶ່ງ, ແຕ່ໃນອີກດ້ານໜຶ່ງ ພຣະອົງປະຕິບັດພາລະກິດຂອງພຣະອົງໃນສະພາບຂອງມະນຸດທຳມະດາ. ເມື່ອເຈົ້າຢຸດປະຕິເສດພາລະກິດໃດໆຂອງພຣະເຈົ້າ, ເມື່ອເຈົ້າຍອມຮັບສິ່ງທີ່ພຣະເຈົ້າກ່າວ ບໍ່ວ່າຈະແມ່ນສິ່ງຫຍັງກໍຕາມ ຫຼື ກະທຳສິ່ງໃດໃນສະພາບຂອງມະນຸດທຳມະດາ, ເມື່ອເຈົ້າສາມາດຍອມຮັບ ແລະ ເຂົ້າໃຈຄວາມປົກກະຕິປະເພດໃດກໍຕາມ ທີ່ພຣະອົງຊົງສະແດງ ແລະ ເມື່ອເຈົ້າໄດ້ຮັບປະສົບການຕົວຈິງແລ້ວ: ເມື່ອນັ້ນເຈົ້າຈຶ່ງສາມາດໝັ້ນໃຈໄດ້ວ່າ ພຣະອົງແມ່ນພຣະເຈົ້າ, ເມື່ອນັ້ນເຈົ້າຈະຢຸດສ້າງແນວຄິດຕ່າງໆ ແລະ ເມື່ອນັ້ນເຈົ້າຈຶ່ງຈະສາມາດຕິດຕາມພຣະອົງຈົນຈົບ. ພາລະກິດຂອງພຣະເຈົ້າແມ່ນມີຄວາມສະຫຼຽວສະຫຼາດ ແລະ ພຣະອົງຮູ້ວິທີທີ່ຈະເຮັດໃຫ້ມະນຸດລຸກຢືນຂຶ້ນຢ່າງໄວ ເພື່ອເປັນປະຈັກພະຍານໃຫ້ພຣະອົງ. ພຣະອົງຊົງຮູ້ວ່າຈຸດອ່ອນສຳຄັນຂອງມະນຸດຢູ່ບ່ອນໃດ. ພຣະທຳທີ່ພຣະອົງກ່າວສາມາດຕີທີ່ຈຸດອ່ອນທີ່ສຳຄັນຂອງເຈົ້າ, ແຕ່ພຣະອົງຍັງໃຊ້ພຣະທຳອັນໜ້າເກງຂາມ ແລະ ສະຫຼາດຂອງພຣະອົງ ເພື່ອເຮັດໃຫ້ເຈົ້າຢືນຢັດຢ່າງໝັ້ນຄົງໃນການເປັນປະຈັກພະຍານໃຫ້ພຣະອົງ. ນັ້ນແມ່ນການກະທຳອັນຢ່າງມີປະຕິຫານຂອງພຣະເຈົ້າ. ພາລະກິດທີ່ພຣະເຈົ້າປະຕິບັດນັ້ນເກີນກວ່າທີ່ຄວາມສະຫຼາດຂອງມະນຸດຈະຈິນຕະນາການໄດ້. ມະນຸດ ເຊິ່ງກໍ່ຄືເນື້ອໜັງ ແມ່ນມີຄວາມເສື່ອມຊາມປະເພດໃດ ແລະ ສິ່ງໃດທີ່ເປັນທາດແທ້ຂອງມະນຸດ ເຊິ່ງທັງໝົດນີ້ແມ່ນຈະຖືກເປີດເຜີຍຜ່ານການພິພາກສາຂອງພຣະເຈົ້າ ເຊິ່ງຈະເຮັດໃຫ້ມະນຸດບໍ່ມີບ່ອນລີ້ຈາກຄວາມອັບອາຍຂອງເຂົາໄດ້.

ພຣະເຈົ້າຊົງກະທຳພາລະກິດແຫ່ງການພິພາກສາ ແລະ ການລົງໂທດ ເພື່ອວ່າມະນຸດຈະສາມາດໄດ້ຮັບຄວາມຮູ້ກ່ຽວກັບພຣະອົງ ແລະ ເພື່ອເປັນປະຈັກພະຍານໃຫ້ພຣະອົງ. ຖ້າບໍ່ມີການພິພາກສາຂອງພຣະອົງ ຕໍ່ອຸປະນິໄສທີ່ເສື່ອມຊາມຂອງມະນຸດ, ມະນຸດຈະບໍ່ສາມາດຮູ້ອຸປະນິໄສທີ່ທ່ຽງທຳຂອງພຣະອົງ ເຊິ່ງຈະບໍ່ຍອມຮັບເອົາຄວາມຜິດ ແລະ ເຂົາຈະບໍ່ສາມາດປ່ຽນແປງຄວາມຮູ້ເດີມກ່ຽວກັບພຣະເຈົ້າໄປເປັນຄວາມຮູ້ ໃໝ່ໄດ້. ເພື່ອປະໂຫຍດຂອງການເປັນປະຈັກພະຍານໃຫ້ແກ່ພຣະອົງ ແລະ ເພື່ອການຄຸ້ມຄອງຂອງພຣະອົງ, ພຣະອົງຊົງເປີດເຜີຍຄວາມເປັນພຣະອົງທັງໝົດສູ່ສາທາລະນະຊົນ, ສະນັ້ນ

ການປາກົດຕົວຂອງພຣະອົງໃນສາທາລະນະຊົນ ຈຶ່ງໄດ້ເຮັດໃຫ້ມະນຸດມາຮູ້ຈັກພຣະເຈົ້າ, ເຮັດໃຫ້ອຸປະນິໄສຂອງມະນຸດໄດ້ຮັບການປ່ຽນແປງ ແລະ ເພື່ອການເປັນປະຈັກພະຍານໃຫ້ແກ່ພຣະເຈົ້າຢ່າງແທ້ຈິງ. ການປ່ຽນແປງອຸປະນິໄສຂອງມະນຸດ ແມ່ນເຮັດໄດ້ຜ່ານພາລະກິດຫຼາຍປະເພດຂອງພຣະເຈົ້າ; ຖ້າບໍ່ມີການປ່ຽນແປງດັ່ງກ່າວຕໍ່ອຸປະນິໄສຂອງມະນຸດ, ມະນຸດຈະບໍ່ສາມາດເປັນປະຈັກພະຍານໃຫ້ແກ່ພຣະເຈົ້າໄດ້ ຫຼື ສະແຫວງຫາຫົວໃຈຂອງພຣະເຈົ້າ. ການປ່ຽນແປງອຸປະນິໄສຂອງມະນຸດບົ່ງບອກວ່າມະນຸດໄດ້ຫຼຸດພົ້ນອອກຈາກການເປັນທາດຂອງຊາຕານ ແລະ ອອກຈາກອິດທິພົນຂອງຄວາມມືດ ແລະ ໄດ້ກາຍເປັນແບບຢ່າງ ແລະ ຕົວຢ່າງຂອງພາລະກິດຂອງພຣະເຈົ້າ, ເປັນພະຍານຂອງພຣະເຈົ້າ ແລະ ເປັນຜູ້ຄົນທີ່ສະແຫວງຫາຫົວໃຈຂອງພຣະເຈົ້າ. ໃນທຸກມື້ນີ້, ພຣະເຈົ້າຜູ້ບັງເກີດເປັນມະນຸດໄດ້ຊົງສະເດັດມາເພື່ອກະທຳພາລະກິດຂອງພຣະອົງໃນແຜ່ນດິນໂລກ ແລະ ພຣະອົງຊົງກຳນົດໃຫ້ມະນຸດມີຄວາມຮູ້ກ່ຽວກັບພຣະອົງ, ເຊື່ອຟັງພຣະອົງ ແລະ ເປັນພະຍານໃຫ້ແກ່ພຣະອົງ ໂດຍທີ່ຮູ້ຈັກພາລະກິດແທ້ ແລະ ພາລະກິດປົກກະຕິຂອງພຣະອົງ, ເຊື່ອຟັງທຸກພຣະທຳ ແລະ ພາລະກິດຂອງພຣະອົງເຊິ່ງບໍ່ໄດ້ສອດຄ່ອງກັບແນວຄິດຂອງມະນຸດ ແລະ ເປັນປະຈັກພະຍານຕໍ່ພາລະກິດທັງໝົດທີ່ພຣະອົງຊົງກະທຳເພື່ອຊ່ວຍໃຫ້ມະນຸດລອດພົ້ນ ພ້ອມດ້ວຍການກະທຳທັງໝົດທີ່ພຣະອົງຊົງກະທຳສຳເລັດໃນການປົກຄອງມະນຸດ. ຜູ້ຄົນທີ່ເປັນປະຈັກພະຍານໃຫ້ແກ່ພຣະເຈົ້າຕ້ອງມີຄວາມຮູ້ກ່ຽວກັບພຣະເຈົ້າ; ມີພຽງການເປັນປະຈັກພະຍານແບບນີ້ເທົ່ານັ້ນທີ່ຖືກຕ້ອງ ແລະ ເປັນຈິງ ແລະ ມີພຽງການເປັນປະຈັກພະຍານແບບນີ້ເທົ່ານັ້ນທີ່ສາມາດເຮັດໃຫ້ຊາຕານອັບອາຍໄດ້. ພຣະເຈົ້າຊົງນຳໃຊ້ຜູ້ຄົນທີ່ມາຮູ້ຈັກພຣະອົງຜ່ານປະສົບການພິພາກສາຂອງພຣະອົງ ແລະ ຜ່ານການລົງໂທດ, ການຈັດການ ແລະ ການຕັດຈຳນວນເພື່ອເປັນປະຈັກພະຍານໃຫ້ແກ່ພຣະອົງ. ພຣະອົງຊົງນຳໃຊ້ຜູ້ຄົນທີ່ຊາຕານເຮັດໃຫ້ເສື່ອມຊາມ ເພື່ອໃຫ້ເປັນປະຈັກພະຍານໃຫ້ແກ່ພຣະອົງ ແລະ ພ້ອມນັ້ນ ພຣະອົງຍັງຊົງນຳໃຊ້ຜູ້ທີ່ໄດ້ປ່ຽນແປງອຸປະນິໄສ ແລະ ຜູ້ທີ່ໄດ້ຮັບພອນຈາກພຣະອົງ ເພື່ອເປັນປະຈັກພະຍານໃຫ້ແກ່ພຣະອົງ. ພຣະອົງບໍ່ຕ້ອງການໃຫ້ມະນຸດມາສັນລະເສີນພຣະອົງດ້ວຍປາກຂອງເຂົາ ແລະ ພຣະອົງຊົງບໍ່ຕ້ອງການຄຳສັນລະເສີນ ແລະ ຄຳພະຍານຂອງຈຳພວກຊາຕານ ເຊິ່ງເປັນຜູ້ທີ່ພຣະອົງບໍ່ໄດ້ຊ່ວຍໃຫ້ລອດພົ້ນ. ມີແຕ່ຜູ້ທີ່ຮູ້ຈັກພຣະເຈົ້າເທົ່ານັ້ນ ທີ່ມີຄຸນສົມບັດເປັນພະຍານໃຫ້ແກ່ພຣະອົງໄດ້ ແລະ ມີແຕ່ຜູ້ທີ່ໄດ້ປ່ຽນແປງອຸປະນິໄສຂອງຕົນເທົ່ານັ້ນ ທີ່ມີຄຸນສົມບັດເປັນພະຍານໃຫ້ແກ່ພຣະອົງໄດ້. ພຣະເຈົ້າຈະບໍ່ອະນຸດຍາດໃຫ້ມະນຸດນຳເອົາຄວາມອັບອາຍມາສູ່ພຣະນາມຂອງພຣະອົງໂດຍເຈດຕະນາ.

# ວິທີທີ່ເປໂຕມາຮູ້ຈັກພຣະເຢຊູ

ໃນລະຫວ່າງທີ່ເປໂຕໃຊ້ເວລາກັບພຣະເຢຊູນັ້ນ, ລາວໄດ້ເຫັນອຸປະນິໄສອັນເປັນຕາຮັກຫຼາຍຢ່າງໃນພຣະເຢຊູ, ມີຫຼາຍດ້ານທີ່ສົມຄວນເອົາເປັນແບບຢ່າງ ແລະ ຫຼາຍດ້ານກໍໄດ້ຊ່ວຍເຫຼືອລາວ. ເຖິງແມ່ນວ່າເປໂຕໄດ້ເຫັນເຖິງການເປັນຢູ່ຂອງພຣະເຈົ້າໃນພຣະເຢຊູໃນຫຼາຍທາງ ແລະ ໄດ້ເຫັນຄຸນສົມບັດທີ່ໜ້າຮັກຫຼາຍຢ່າງ, ລາວບໍ່ໄດ້ຮູ້ຈັກພຣະເຢຊູເທື່ອໃນຕອນທຳອິດ. ເປໂຕເລີ່ມຕິດຕາມພຣະເຢຊູເມື່ອລາວໄດ້ 20 ປີ ແລະ ລາວສືບຕໍ່ຕິດຕາມພຣະອົງເປັນເວລາຫົກປີ. ໃນລະຫວ່າງເວລານັ້ນ ເປໂຕບໍ່ເຄີຍຮູ້ຈັກພຣະເຢຊູ; ເປໂຕເຕັມໃຈທີ່ຈະຕິດຕາມພຣະເຢຊູດ້ວຍຄວາມນັບຖືສຳລັບພຣະອົງຢ່າງແທ້ຈິງ. ເມື່ອພຣະເຢຊູເອີ້ນໃສ່ເປໂຕຄັ້ງທຳອິດເທິງແຄມທະເລກາລິເລ, ພຣະອົງຖາມວ່າ: "ຊີໂມນ, ບາໂຢນາ ທ່ານຈະຕິດຕາມເຮົາບໍ?" ເປໂຕເວົ້າວ່າ: "ຂ້ານ້ອຍຕ້ອງຕິດຕາມຜູ້ທີ່ຖືກສົ່ງມາໂດຍພຣະບິດາເທິງສະຫວັນ. ຂ້ານ້ອຍຕ້ອງຍອມຮັບຮູ້ຜູ້ທີ່ຖືກເລືອກໂດຍພຣະວິນຍານບໍລິສຸດ. ຂ້ານ້ອຍຈະຕິດຕາມພຣະອົງ". ໃນເວລານັ້ນ ເປໂຕແມ່ນເຄີຍໄດ້ຍິນເລື່ອງລາວກ່ຽວກັບຊາຍຄົນໜຶ່ງທີ່ຊື່ພຣະເຢຊູ ຜູ້ທີ່ຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ທີ່ສຸດ ແລະ ພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ ແລະ ເປໂຕກໍ່ຫວັງຢູ່ສະເໝີເພື່ອພົບພຣະອົງ ແລະ ຫວັງວ່າຈະມີໂອກາດໄດ້ເຫັນພຣະອົງ (ເພາະວ່ານັ້ນຄືລັກສະນະທີ່ລາວຖືກນຳພາໂດຍພຣະວິນຍານບໍລິສຸດ). ເຖິງແມ່ນວ່າ ເປໂຕບໍ່ເຄີຍເຫັນພຣະອົງມາກ່ອນ ແລະ ເຄີຍໄດ້ຍິນແຕ່ຂ່າວລືກ່ຽວກັບພຣະອົງ ແຕ່ຄວາມສະແຫວງຫາ ແລະ ຄວາມເຄົາລົບຮັກທີ່ມີຕໍ່ພຣະເຢຊູກໍ່ເຕີບໃຫຍ່ຢູ່ໃນຫົວໃຈຂອງລາວເທື່ອລະໜ້ອຍ ແລະ ລາວຫວັງຢູ່ສະເໝີວ່າ ມື້ໜຶ່ງຈະໄດ້ເຫັນພຣະເຢຊູ. ແລ້ວພຣະເຢຊູເອີ້ນຫາເປໂຕແນວໃດ? ພຣະອົງເອງກໍ່ເຄີຍໄດ້ຍິນເລື່ອງລາວກ່ຽວກັບຊາຍຄົນໜຶ່ງທີ່ຊື່ເປໂຕ, ແຕ່ມັນບໍ່ແມ່ນພຣະວິນຍານບໍລິສຸດທີ່ສັ່ງບອກພຣະອົງວ່າ: "ໃຫ້ໄປຍັງທະເລຄາລິເລ, ຢູ່ທີ່ນັ້ນຈະມີຄົນຊື່ເປໂຕ ບາໂຢນາ". ພຣະເຢຊູ ໄດ້ຍິນບາງຄົນເວົ້າວ່າມີຄົນຊື່ຊີໂມນ ບາໂຢນາ ແລະ ທີ່ມີຜູ້ຄົນໄດ້ຟັງຄຳເທດສະໜາຂອງລາວ, ລາວເອງກໍ່ເປັນຜູ້ກ່າວປະກາດພຣະກິດຕິຄຸນຂອງອານາຈັກແຫ່ງສະຫວັນ ແລະ ຜູ້ຄົນທີ່ໄດ້ຍິນຄຳກ່າວປະກາດຂອງລາວແມ່ນພາກັນຖືກດົນບັນດານຈົນຮ້ອງໄຫ້ກັນໝົດທຸກຄົນ. ຫຼັງຈາກໄດ້ຍິນແບບນີ້, ພຣະເຢຊູກໍ່ຄົນນັ້ນໄປເຖິງທະເລກາລິເລ; ເມື່ອເປໂຕຮັບເອົາການຊົງເອີ້ນຂອງພຣະເຢຊູ, ລາວກໍ່ຕິດຕາມພຣະອົງເລີ່ມແຕ່ນັ້ນມາ.

ໃນໄລຍະເວລາທີ່ລາວຕິດຕາມພຣະເຢຊູນັ້ນ ເປໂຕໄດ້ມີຄວາມເຫັນຫຼາຍຢ່າງກ່ຽວກັບພຣະອົງ ແລະ ຕັດສິນພຣະອົງຈາກທັດສະນະຂອງລາວເອງຢູ່ສະເໝີ. ເຖິງແມ່ນວ່າເປໂຕມີຄວາມເຂົ້າໃຈກ່ຽວກັບພຣະວິນຍານໃນລະດັບໃດໜຶ່ງ, ການເຂົ້າໃຈຂອງລາວກໍ່ຂ້ອນຂ້າງບໍ່ຊັດເຈນ, ດ້ວຍເຫດນີ້ ລາວຈຶ່ງເວົ້າວ່າ: "ຂ້ານ້ອຍຕ້ອງຕິດຕາມຜູ້ທີ່ຖືກສົ່ງມາໂດຍພຣະບິດາເທິງສະຫວັນ, ຂ້ານ້ອຍຕ້ອງຍອມຮັບຮູ້ຜູ້ທີ່ຖືກເລືອກໂດຍພຣະວິນຍານບໍລິສຸດ". ລາວບໍ່ໄດ້ເຂົ້າໃຈໃນສິ່ງທີ່ພຣະເຢຊູກະທຳ ແລະ ຂາດຄວາມຊັດເຈນກ່ຽວກັບສິ່ງເຫຼົ່ານັ້ນ. ຫຼັງຈາກໄດ້ຕິດຕາມພຣະອົງໃນໄລຍະໜຶ່ງ, ເປໂຕຈຶ່ງເກີດມີຄວາມສົນໃຈໃນສິ່ງທີ່ພຣະອົງເຮັດ ແລະ ເວົ້າ ແລະ ໃນຕົວພຣະເຢຊູເອງ. ລາວເລີ່ມຮູ້ສຶກວ່າພຣະເຢຊູ

ກະຕຸ້ນທັງຄວາມຮັກ ແລະ ຄວາມເຄົາລົບ; ລາວມັກພົວພັນກັບພຣະອົງ ແລະ ຢູ່ຄຽງຂ້າງພຣະອົງ ແລະ ຟັງພຣະທຳຂອງພຣະເຢຊູທີ່ສອນໃຫ້ລາວຮູ້ຈັກເລື່ອງການໃຫ້ ແລະ ການຊ່ວຍເຫຼືອ. ໃນລະຫວ່າງເວລາທີ່ລາວຕິດຕາມພຣະເຢຊູ, ເປໂຕກໍ່ໄດ້ສັງເກດ ແລະ ເອົາໃຈໃສ່ໃນທຸກຢ່າງກ່ຽວກັບຊີວິດຂອງພຣະເຢຊູ: ການກະທຳ, ພຣະທຳ, ການເຄື່ອນໄຫວ ຫຼື ການສະແດງອອກຂອງພຣະອົງ. ລາວໄດ້ເຂົ້າໃຈຢ່າງເລິກເຊິ່ງວ່າພຣະເຢຊູບໍ່ຄືກັບມະນຸດທຳມະດາ. ເຖິງແມ່ນວ່າ ລັກສະນະມະນຸດຂອງພຣະອົງແມ່ນປົກກະຕິເກີນໄປ, ພຣະອົງກໍ່ເຕັມໄປດ້ວຍຄວາມຮັກ, ຄວາມເມດຕາ ແລະ ຄວາມອົດທົນຕໍ່ມະນຸດ. ທຸກສິ່ງຢ່າງທີ່ພຣະເຢຊູເຮັດ ຫຼື ເວົ້າໄດ້ຊ່ວຍເຫຼືອຄົນອື່ນຫຼາຍ ແລະ ເປໂຕໄດ້ເຫັນ ແລະ ຮັບສິ່ງຕ່າງໆທີ່ລາວບໍ່ເຄີຍເຫັນ ຫຼື ມີມາກ່ອນຈາກພຣະເຢຊູ. ລາວໄດ້ເຫັນວ່າ ເຖິງແມ່ນພຣະເຢຊູບໍ່ໄດ້ມີວຸດທິພາວະທີ່ຍິ່ງໃຫຍ່ ຫຼື ຄວາມເປັນມະນຸດທີ່ເໜືອປົກກະຕິ, ພຣະອົງມີລັດສະໝີທີ່ພິເສດ ແລະ ບໍ່ທຳມະດາແທ້ໆເຊິ່ງອ້ອມຮອບພຣະອົງ. ເຖິງແມ່ນວ່າເປໂຕຈະບໍ່ສາມາດອະທິບາຍໄດ້ຢ່າງຄົບຖ້ວນ, ລາວກໍ່ສາມາດເຫັນວ່າພຣະເຢຊູປະຕິບັດແຕກຕ່າງຈາກຄົນອື່ນໆ ເພາະວ່າສິ່ງທີ່ພຣະອົງເຮັດແມ່ນແຕກຕ່າງຈາກການກະທຳຂອງມະນຸດທຳມະດາຫຼາຍ. ຈາກເວລາທີ່ລາວພົວພັນກັບພຣະເຢຊູນັ້ນ, ເປໂຕຍັງຮູ້ອີກວ່າລັກສະນະຂອງພຣະອົງແມ່ນແຕກຕ່າງຈາກມະນຸດທີ່ທຳມະດາ. ພຣະອົງປະຕິບັດຕົນຢ່າງສະໝ່ຳສະເໝີຕະຫຼອດເວລາ ແລະ ບໍ່ເຄີຍຮີບຮ້ອນ, ບໍ່ເຄີຍອວດໂອ້ ຫຼື ດູຖູກຄົນອື່ນ ແລະ ພຣະອົງໃຊ້ຊີວິດຂອງພຣະອົງໃນເສັ້ນທາງທີ່ເປີດເຜີຍເຖິງຮູບລັກສະນະທີ່ທັງທຳມະດາ ແລະ ໜ້າຍ້ອງຍໍສັນລະເສີນ. ໃນເລື່ອງການສົນທະນາ ພຣະເຢຊູເວົ້າຢ່າງຊັດເຈນ ແລະ ດ້ວຍພຣະຄຸນ ການສື່ສານແມ່ນຢູ່ໃນລັກສະນະທີ່ລ່າເລີງ ແຕ່ກໍ່ງຽບສະຫງົບ ແລະ ພຣະອົງກໍບໍ່ເຄີຍເສຍກຽດສັກສີຂອງພຣະອົງ ເມື່ອກຳລັງປະຕິບັດພາລະກິດຂອງພຣະອົງ. ເປໂຕເຫັນພຣະເຢຊູບາງຄັ້ງເປັນຄົນມິດງຽບ ໃນຂະນະທີ່ບາງຄັ້ງ ພຣະອົງກໍ່ເວົ້າຫຼາຍ. ບາງຄັ້ງພຣະອົງດີໃຈຫຼາຍຈົນພຣະອົງປາກົດເປັນຄືກັບນົກເຂົາທີ່ກະໂດດເຕັ້ນ ແລະ ລ່າເລີງ ແລະ ໃນເວລາອື່ນ ພຣະອົງກໍ່ໂສກເສົ້າຫຼາຍຈົນພຣະອົງບໍ່ເວົ້າບໍ່ຈາຫຍັງເລີຍ, ເບິ່ງຄືກັບວ່າ ພຣະອົງແບກຫາບພາລະດ້ວຍຄວາມເສົ້າໃຈເໝືອນກັບວ່າພຣະອົງເປັນແມ່ທີ່ເມື່ອຍ ແລະ ອ່ອນເພຍ. ໃນບາງຄັ້ງພຣະອົງກໍເຕັມໄປດ້ວຍຄວາມໂກດຮ້າຍ ເໝືອນດັ່ງທະຫານກ້າແລ່ນບຸກຂ້າສັດຕູ ແລະ ໃນບາງໂອກາດພຣະອົງເຖິງກັບເປັນເໝືອນດັ່ງສິງໂຕທີ່ຮ້ອງສຽງດັງ. ບາງຄັ້ງພຣະອົງຫົວ; ບາງຄັ້ງພຣະອົງອະທິຖານ ແລະ ຮ້ອງໄຫ້. ບໍ່ວ່າພຣະອົງຈະສະແດງກະລິຍາອອກມາແບບໃດ ເປໂຕກໍ່ແຮງມີຄວາມຮັກ ແລະ ເຄົາລົບທີ່ໄຮ້ຂອບເຂດຕໍ່ພຣະອົງ. ສຽງຫົວຂອງພຣະເຢຊູເຮັດໃຫ້ລາວມີຄວາມສຸກ, ຄວາມໂສກເສົ້າຂອງພຣະອົງເຮັດໃຫ້ເປໂຕທຸກໂສກເສຍໃຈ, ຄວາມໂກດຮ້າຍເຮັດໃຫ້ເປໂຕຢ້ານກົວ, ໃນຂະນະທີ່ຄວາມເມດຕາ, ການໃຫ້ອະໄພ ແລະ ການຮຽກຮ້ອງຢ່າງເຂັ້ມງວດທີ່ພຣະອົງຮຽກຮ້ອງຈາກລາວເຮັດໃຫ້ເປໂຕມາຮັກພຣະເຢຊູຢ່າງແທ້ຈິງ ແລະ ມີຄວາມເຄົາລົບ ແລະ ຄວາມປາຖະໜາຕໍ່ພຣະອົງຢ່າງແທ້ຈິງ. ແນ່ນອນ ເປໂຕພຽງມາຮູ້ຈັກໃນສິ່ງນີ້ ຫຼັງຈາກລາວໄດ້ມາຢູ່ນຳພຣະເຢຊູໄດ້ເປັນເວລາໄລຍະໜຶ່ງ.

ເປໂຕເປັນຄົນທີ່ມີເຫດຜົນເປັນພິເສດ, ເກີດມາກັບຄວາມສະຫຼາດໂດຍທຳມະຊາດ ແຕ່ລາວໄດ້ເຮັດໃນສິ່ງໂງ່ຈ້າຫຼາຍຢ່າງໃນເວລາຕິດຕາມພຣະເຢຊູ. ໃນຕອນທຳອິດ, ລາວມີແນວຄິດຕ່າງໆນາໆ

ກ່ຽວກັບພຣະເຢຊູ. ລາວຖາມວ່າ: "ຜູ້ຄົນເວົ້າວ່າທ່ານຄືຜູ້ປະກາດພຣະທຳ, ສະນັ້ນເມື່ອທ່ານມີອາຍຸແປດປີ ແລະ ເລີ່ມເຂົ້າໃຈສິ່ງຕ່າງໆ ທ່ານໄດ້ຮູ້ບໍ່ວ່າທ່ານຄືພຣະເຈົ້າ? ທ່ານໄດ້ຮູ້ບໍ່ວ່າທ່ານຖືກປະຕິສົນທິຈາກພຣະວິນຍານບໍລິສຸດ?" ພຣະເຢຊູຕອບວ່າ: "ບໍ່, ເຮົາບໍ່ຮູ້! ເຮົາເບິ່ງບໍ່ຄືຜູ້ຄົນທຳມະດາໃນສາຍຕາທ່ານບໍ? ເຮົາກໍເໝືອນຄົນອື່ນໆນັ້ນແລ້ວ. ບຸກຄົນທີ່ພຣະບິດາສົ່ງມາແມ່ນຄົນທຳມະດາ ບໍ່ແມ່ນຄົນວິເສດຫຍັງ. ແລ້ວເຖິງແມ່ນວ່າ ພາລະກິດທີ່ເຮົາເຮັດຈະສະແດງເຖິງພຣະບິດາຂອງເຮົາທີ່ຢູ່ໃນສະຫວັນ, ແຕ່ພາບລັກຂອງເຮົາ, ຕົວຕົນທີ່ເຮົາເປັນ ແລະ ຮ່າງກາຍທາງເນື້ອໜັງນີ້ບໍ່ສາມາດເປັນຕົວແທນພຣະບິດາຂອງເຮົາທີ່ຢູ່ໃນສະຫວັນໄດ້ທັງໝົດ ມີພຽງບາງສ່ວນຂອງພຣະອົງເທົ່ານັ້ນ. ເຖິງແມ່ນວ່າເຮົາມາຈາກພຣະວິນຍານ ແຕ່ເຮົາກໍ່ຍັງເປັນຄົນທຳມະດາສາມັນ ແລະ ພຣະບິດາຂອງເຮົາໄດ້ສົ່ງເຮົາມາຍັງໂລກນີ້ເປັນຄົນທຳມະດາ ບໍ່ແມ່ນຄົນວິເສດຫຍັງທັງນັ້ນ". ເມື່ອເປໂຕໄດ້ຍິນເຊັ່ນນີ້ ລາວຈຶ່ງເຂົ້າໃຈພຣະເຢຊູດີຂຶ້ນ. ຫຼັງຈາກທີ່ລາວໄດ້ມີປະສົບການຜ່ານວຽກງານຂອງພຣະເຢຊູ, ຜ່ານຄຳສອນຂອງພຣະອົງ ຜ່ານການນຳພາຂອງພຣະອົງ ແລະ ຄວາມບຳລຸງລ້ຽງຂອງພຣະອົງຫຼາຍຊົ່ວໂມງຈົນນັບບໍ່ຖ້ວນ, ລາວຈຶ່ງໄດ້ເຂົ້າໃຈພຣະອົງຢ່າງເລິກເຊິ່ງຍິ່ງຂຶ້ນ. ເມື່ອພຣະເຢຊູອາຍຸໄດ້ 30 ປີ, ພຣະອົງກໍ່ໄດ້ບອກເປໂຕກ່ຽວກັບການຄຶງກາງແຂນທີ່ຈະມາເຖິງ ແລະ ພຣະອົງໄດ້ສະເດັດມາປະຕິບັດຂັ້ນຕອນພາລະກິດດັ່ງກ່າວ ນັ້ນກໍ່ຄື ພາລະກິດແຫ່ງການຄຶງກາງແຂນເພື່ອໄຖ່ບາບໃຫ້ກັບມະນຸດທຸກຄົນ. ພຣະເຢຊູຍັງໄດ້ບອກເປໂຕອີກວ່າ ສາມມື້ຫຼັງຈາກການຄຶງຢູ່ເທິງໄມ້ກາງແຂນ ບຸດມະນຸດຈະຟື້ນຄືນຊີວິດອີກຄັ້ງ ແລະ ຫຼັງຈາກຟື້ນຄືນຊີວິດແລ້ວ ພຣະອົງກໍຈະປາກົດໃຫ້ຜູ້ຄົນເຫັນເປັນເວລາ 40 ວັນ. ເມື່ອໄດ້ຍິນຄຳເວົ້າເຫຼົ່ານີ້, ເປໂຕກໍຮູ້ສຶກເສົ້າເສຍໃຈຫຼາຍ ແລະ ເກັບຄຳເວົ້າເຫຼົ່ານີ້ມາໃສ່ໃຈ; ຫຼັງຈາກນັ້ນມາ, ລາວກໍ່ເກີດເລີ່ມໃກ້ຊິດກັບພຣະເຢຊູຫຼາຍຂຶ້ນ. ຫຼັງຈາກທີ່ໄດ້ມີປະສົບການໃນຊ່ວງເວລາໃດໜຶ່ງ, ເປໂຕໄດ້ຮູ້ວ່າທຸກສິ່ງທີ່ພຣະເຢຊູກະທຳຄືການເປັນພຣະເຈົ້າ ແລະ ລາວຄິດວ່າພຣະເຢຊູແມ່ນເປັນຄົນທີ່ເປັນຕາຮັກເປັນພິເສດ. ມີແຕ່ເມື່ອລາວມີຄວາມເຂົ້າໃຈກັບສິ່ງນີ້ແລ້ວ ພຣະວິນຍານບໍລິສຸດຈຶ່ງພອນແສງສະຫວ່າງໃຫ້ກັບລາວຈາກພາຍໃນ. ຫຼັງຈາກນັ້ນເອງ, ພຣະເຢຊູໄດ້ຫັນໜ້າໄປຫາສາວົກຂອງພຣະອົງ ແລະ ຜູ້ຕິດຕາມຄົນອື່ນໆ ແລະ ຖາມວ່າ: "ໂຢຮັນ, ທ່ານວ່າເຮົາແມ່ນໃຜ?" ໂຢຮັນຕອບວ່າ: "ທ່ານແມ່ນໂມເຊ". ພຣະອົງຫັນໄປຫາລູກາ: "ທ່ານເດ ລູກາ, ທ່ານວ່າເຮົາແມ່ນໃຜ?" ລູກາຕອບວ່າ: "ທ່ານແມ່ນຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ທີ່ສຸດ". ຫຼັງຈາກນັ້ນ, ພຣະອົງຖາມເອື້ອຍຄົນໜຶ່ງ ແລະລາວຕອບວ່າ: "ທ່ານຄືຜູ້ປະກາດພຣະທຳຍິ່ງໃຫຍ່ທີ່ສຸດທີ່ກ່າວຖ້ອຍຄຳມາຈາກຕົ້ນສູ່ປາຍ. ບໍ່ມີຄຳທຳນາຍຂອງຜູ້ໃດທີ່ຈະຍິ່ງໃຫຍ່ສໍ່າຄຳທຳນາຍຂອງທ່ານ ແລະ ບໍ່ມີຄວາມຮູ້ຂອງຜູ້ໃດຈະເໜືອກວ່າຄວາມຮູ້ຂອງທ່ານອີກແລ້ວ, ທ່ານຄືຜູ້ປະກາດພຣະທຳ". ຫຼັງຈາກນັ້ນ ພຣະອົງຫັນໄປຫາເປໂຕແລ້ວຖາມວ່າ: "ເປໂຕ, ທ່ານວ່າເຮົາແມ່ນໃຜ?" ເປໂຕຕອບວ່າ: "ພຣະອົງຄືພຣະຄຣິດ ພຣະບຸດຂອງພຣະເຈົ້າຜູ້ທີ່ຊົງພຣະຊົນຢູ່. ພຣະອົງມາຈາກສະຫວັນ ພຣະອົງບໍ່ໄດ້ມາຈາກແຜ່ນດິນໂລກນີ້, ພຣະອົງບໍ່ເໝືອນດັ່ງສິ່ງເນລະມິດສ້າງຂອງພຣະເຈົ້າ. ພວກເຮົາຢູ່ແຜ່ນດິນໂລກນີ້ ແລະ ພຣະອົງກໍຢູ່ແຜ່ນດິນໂລກນີ້ກັບພວກເຮົາ ແຕ່ພຣະອົງມາຈາກສະຫວັນ ແລະ ບໍ່ໄດ້ມາຈາກໂລກນີ້ ແລະ ພຣະອົງບໍ່ໄດ້ເປັນຂອງ

ໂລກນີ້”. ຜ່ານປະສົບການທີ່ ພຣະວິນຍານບໍລິສຸດໄດ້ໃຫ້ລາວໄດ້ເຫັນ, ເຊິ່ງເຮັດໃຫ້ລາວເຂົ້າໃຈໃນສິ່ງນີ້. ຫຼັງຈາກໄດ້ຮັບຄວາມສະຫວ່າງດັ່ງກ່າວນີ້ ລາວຈຶ່ງໄດ້ຊື່ນຊົມທຸກຢ່າງທີ່ພຣະເຢຊູກະທຳຫຼາຍຂຶ້ນ, ຄິດວ່າພຣະອົງເປັນຕາຮັກຍິ່ງຂຶ້ນ ແລະ ລັງເລໃນຫົວໃຈຂອງລາວທີ່ຈະຈາກພຣະເຢຊູໄປ. ດັ່ງນັ້ນ ຄັ້ງທຳອິດທີ່ພຣະເຢຊູປາກົດຕົວໃຫ້ເປໂຕເຫັນ ຫລັງຈາກພຣະອົງຖືກຄຶງໃສ່ໄມ້ກາງແຂນ ແລ້ວຟື້ນຄືນຊີວິດກັບມາ ເປໂຕຮ້ອງໄຫ້ດ້ວຍຄວາມດີໃຈຢ່າງແຮງ: “ພຣະຜູ້ເປັນເຈົ້າ! ພຣະອົງໄດ້ຟື້ນຄືນຊີວິດມາແລ້ວ!” ຫລັງຈາກນັ້ນກໍຮ້ອງໄຫ້ຂຶ້ນອີກ ພ້ອມຈັບເອົາປາໂຕໃຫຍ່ໂຕໜຶ່ງ, ຄົວມັນແລະ ເອົາໃຫ້ພຣະເຢຊູກິນ. ພຣະເຢຊູໄດ້ແຕ່ຍິ້ມ ແຕ່ບໍ່ເວົ້າຫຍັງ. ເຖິງແມ່ນວ່າ ເປໂຕຮູ້ວ່າພຣະເຢຊູໄດ້ຟື້ນຄືນຊີວິດກັບມາ ລາວບໍ່ເຂົ້າໃຈເຖິງຄວາມລຶກລັບຂອງສິ່ງນັ້ນ. ເມື່ອເວລາລາວເອົາປາທີ່ຄົວແລ້ວນັ້ນໃຫ້ພຣະເຢຊູກິນ ພຣະເຢຊູບໍ່ໄດ້ປະຕິເສດ ແຕ່ພຣະອົງບໍ່ເວົ້າຈາຫຍັງ ຫຼື ນັ່ງລົງກິນປາດັ່ງກ່າວນັ້ນ. ແຕ່ກົງກັນຂ້າມພຣະອົງແມ່ນຫາຍໄປຢ່າງໄວວາ. ເຫດການທີ່ເກີດຂຶ້ນເຮັດໃຫ້ເປໂຕຕົກໃຈຢ່າງແຮງ ແລະ ເມື່ອນັ້ນເອງເປໂຕຈຶ່ງເຂົ້າໃຈວ່າພຣະເຢຊູທີ່ກັບມານີ້ ແມ່ນແຕກຕ່າງຈາກພຣະເຢຊູໃນເມື່ອກ່ອນ. ເມື່ອລາວເຂົ້າໃຈເປັນເຊັ່ນນີ້ ເປໂຕກໍ່ໂສກເສົ້າເສຍໃຈຫຼາຍ ແຕ່ລາວກໍອົບອຸ່ນໃຈທີ່ໄດ້ຮູ້ວ່າພຣະຜູ້ເປັນເຈົ້າໄດ້ສຳເລັດພາລະກິດຂອງພຣະອົງແລ້ວ. ລາວໄດ້ຮູ້ວ່າພຣະເຢຊູໄດ້ສຳເລັດໜ້າທີ່ຂອງພຣະອົງແລ້ວ ເຊິ່ງເວລາຂອງພຣະອົງທີ່ຢູ່ກັບມະນຸດແມ່ນໄດ້ສິ້ນສຸດລົງ ແລະ ຕໍ່ຈາກນີ້ໄປມະນຸດຈະຕ້ອງໄດ້ເດີນຕາມທາງຂອງຕົນເອງ. ຄັ້ງໜຶ່ງພຣະເຢຊູໄດ້ບອກເປໂຕວ່າ: “ທ່ານເຊັ່ນກັນ ຕ້ອງດື່ມຈາກຈອກອັນຂົມຂື່ນທີ່ເຮົາດື່ມ (ນີ້ແມ່ນສິ່ງທີ່ພຣະອົງໄດ້ກ່າວຫລັງຈາກການກັບຄືນຊີບຂອງພຣະອົງ), ທ່ານເຊັ່ນກັນຕ້ອງເດີນຕາມທາງທີ່ເຮົາເດີນ, ທ່ານຕ້ອງຍອມສະຫຼະຊີວິດເພື່ອເຮົາ”. ບໍ່ເໝືອນດັ່ງປັດຈຸບັນນີ້ ພາລະກິດໃນສະໄໝນັ້ນບໍ່ແມ່ນໃນຮູບແບບສົນທະນາກັນໜ້າຕໍ່ໜ້າ. ໃນລະຫວ່າງຍຸກແຫ່ງຄວາມກະລຸນາ ພາລະກິດຂອງພຣະວິນຍານບໍລິສຸດແມ່ນລຶກລັບຫຼາຍ ແລະ ເປໂຕໄດ້ທົນທຸກທໍລະມານຜ່ານຄວາມຍາກລຳບາກມາກມາຍ. ບາງຄັ້ງ ເປໂຕກໍ່ເຖິງຂັ້ນທີ່ຕ້ອງຮ້ອງໄຫ້ອ້ອນວອນ: “ພຣະເຈົ້າ ຂ້ານ້ອຍບໍ່ມີສິ່ງໃດອີກແລ້ວນອກຈາກຊີວິດນີ້ ເຖິງແມ່ນວ່າມັນຈະບໍ່ມີຄຸນຄ່າຫຍັງຫຼາຍສຳລັບພຣະອົງ ຂ້ານ້ອຍຂໍອຸທິດຊີວິດນີ້ໃຫ້ກັບພຣະອົງ. ເຖິງແມ່ນວ່າມະນຸດຈະບໍ່ມີຄ່າທີ່ຈະຮັກພຣະອົງ ແລະ ຄວາມຮັກຂອງພວກເຂົາ ຫຼື ຈິດໃຈຂອງພວກເຂົາຈະບໍ່ມີຄຸນຄ່າຫຍັງ ຂ້ານ້ອຍເຊື່ອວ່າພຣະອົງຈະສາມາດເບິ່ງເຫັນເຈດຕະນາຈາກຈິດໃຈຂອງມະນຸດ ແລະ ເຖິງແມ່ນວ່າຮ່າງກາຍຂອງມະນຸດຈະບໍ່ມີຄຸນສົມບັດພຽງພໍທີ່ພຣະອົງຈະຮັບເອົາໄດ້ ຂ້ານ້ອຍຂໍໃຫ້ພຣະອົງຮັບເອົາຫົວໃຈຂອງຂ້ານ້ອຍດ້ວຍເທີດ”. ຫລັງຈາກໄດ້ກ່າວຄຳອະທິຖານເຫຼົ່ານີ້ ເປໂຕກໍມີກຳລັງໃຈຂຶ້ນ ໂດຍສະເພາະເມື່ອລາວກ່າວຄຳອະທິຖານວ່າ: “ຂ້ານ້ອຍຈະອຸທິດຈິດໃຈຂອງຂ້ານ້ອຍທັງໝົດໃຫ້ກັບພຣະເຈົ້າ ເຖິງແມ່ນວ່າຂ້ານ້ອຍຈະບໍ່ສາມາດເຮັດສິ່ງໃດເພື່ອພຣະອົງ ຂ້ານ້ອຍຈະເຮັດໃຫ້ພຣະອົງເພິ່ງພໍໃຈດ້ວຍຄວາມຈິງຮັກພັກດີ ແລະ ອຸທິດຕົວຂ້ານ້ອຍໃຫ້ກັບພຣະອົງທັງໝົດທັງສິ້ນ. ຂ້ານ້ອຍເຊື່ອວ່າພຣະອົງຈະຕ້ອງເບິ່ງເຫັນຫົວໃຈຂອງຂ້ານ້ອຍ”. ລາວກ່າວອີກວ່າ: “ຂ້ານ້ອຍບໍ່ຂໍສິ່ງໃດໃນຊີວິດນີ້ ຂໍພຽງໃນໃຈຂອງຂ້ານ້ອຍມີແຕ່ຄວາມຮັກຕໍ່ພຣະອົງ ແລະ ຂໍໃຫ້ຄວາມປາຖະໜາໃນຈິດໃຈຂອງຖືກຮັບເອົາໂດຍພຣະເຈົ້າດ້ວຍເທີດ. ຂ້ານ້ອຍໄດ້ຢູ່ກັບພຣະເຢຊູເຈົ້າເປັນເວລາດົນນານ

ແຕ່ຂ້ານ້ອຍບໍ່ເຄີຍຮັກພຣະອົງເລີຍ ນັ້ນຄືໜີ້ພຣະຄຸນອັນຍິ່ງໃຫຍ່. ເຖິງແມ່ນວ່າ ຂ້ານ້ອຍໄດ້ຢູ່ກັບພຣະອົງ ຂ້ານ້ອຍກໍບໍ່ໄດ້ຮູ້ຈັກພຣະອົງເລີຍ ແລະ ຂ້ານ້ອຍເຖິງກັບເວົ້າສິ່ງທີ່ບໍ່ເໝາະສົມລັບຫລັງພຣະອົງອີກ. ການຄິດເຖິງເລື່ອງນີ້ແລ້ວເຮັດໃຫ້ຂ້ານ້ອຍຮູ້ສຶກເປັນໜີ້ພຣະຄຸນຕໍ່ອົງພຣະເຢຊູເຈົ້າຕື່ມອີກ". ລາວອະທິຖານໃນລັກສະນະນີ້ສະເໝີ. ລາວເວົ້າວ່າ: "ຂ້ານ້ອຍຕໍ່າຕ້ອຍກວ່າຂີ້ຝຸ່ນ ຂ້ານ້ອຍບໍ່ສາມາດເຮັດສິ່ງໃດໄດ້ນອກຈາກອຸທິດຈິດໃຈອັນຈິງຮັກພັກດີນີ້ໃຫ້ກັບພຣະເຈົ້າ".

ມີຈຸດສູງສຸດໃນປະສົບການຂອງເປໂຕ ເມື່ອຮ່າງກາຍຂອງລາວຕ້ອງອ່ອນເພຍໄປໝົດ ແຕ່ພຣະເຢຊູຍັງໃຫ້ການໜູນໃຈແກ່ລາວຈາກພາຍໃນ. ແລ້ວມີຄັ້ງໜຶ່ງ ພຣະອົງໄດ້ເຄີຍປາກົດໃຫ້ເປໂຕ. ໃນເວລາເປໂຕທົນທຸກທໍລະມານຢ່າງສາຫັດ ແລະ ຮູ້ສຶກວ່າຈິດໃຈຂອງລາວເຕັມໄປດ້ວຍຄວາມສິ້ນຫວັງ ພຣະເຢຊູໄດ້ກ່າວຕໍ່ລາວວ່າ: "ທ່ານ ເຄີຍຢູ່ກັບເຮົາໃນແຜ່ນດິນໂລກນີ້ ແລະ ເຮົາກໍເຄີຍຢູ່ແຜ່ນດິນໂລກນີ້ກັບທ່ານ. ເຖິງແມ່ນວ່າ ເມື່ອກ່ອນພວກເຮົາໄດ້ຢູ່ນຳກັນໃນສະຫວັນ ແຕ່ໃນຄວາມຈິງແລ້ວມັນກໍຄືໂລກແຫ່ງວິນຍານ. ດຽວນີ້ ເຮົາໄດ້ກັບມາຍັງໂລກແຫ່ງວິນຍານນີ້ແລ້ວ ແລະ ທ່ານແມ່ນຍັງຢູ່ແຜ່ນດິນໂລກ. ຍ້ອນເຮົາບໍ່ໄດ້ມາຈາກແຜ່ນດິນໂລກ ແລະ ເຖິງແມ່ນວ່າ ທ່ານເອງກໍບໍ່ໄດ້ມາຈາກແຜ່ນດິນໂລກເຊັ່ນກັນ ແຕ່ທ່ານຈຳເປັນຕ້ອງບັນລຸພາລະໜ້າທີ່ຂອງທ່ານໃນແຜ່ນດິນໂລກນີ້. ເພາະວ່າທ່ານຄືຜູ້ຮັບໃຊ້ພຣະເຈົ້າ, ທ່ານຕ້ອງປະຕິບັດຕໍ່ໜ້າທີ່ຂອງທ່ານ". ການທີ່ໄດ້ຍິນວ່າລາວຈະສາມາດຢູ່ຄຽງຂ້າງກັບພຣະເຈົ້າອີກ ລາວກໍອົບອຸ່ນໃຈຂຶ້ນ. ໃນເວລາທີ່ເປໂຕປະສົບກັບຄວາມທຸກທໍລະມານດັ່ງກ່າວທີ່ລາວເກືອບຕ້ອງໄດ້ນອນພັກຟື້ນຢູ່ໃນບ່ອນ, ລາວຮູ້ສຶກເສຍໃຈຫຼາຍຈົນເຖິງຂັ້ນໄດ້ອ້ອນວອນວ່າ: "ຂ້ານ້ອຍເປັນຄົນຊົ່ວຊ້າຫຼາຍ ຂ້ານ້ອຍບໍ່ສາມາດເປັນທີ່ເພິ່ງພໍໃຈພຣະເຈົ້າໄດ້". ພຣະເຢຊູກໍປາກົດຕໍ່ໜ້າລາວ ແລ້ວກ່າວວ່າ: "ເປໂຕ, ບໍ່ແມ່ນເປັນເພາະວ່າທ່ານລືມຄຳໝັ້ນສັນຍາທີ່ທ່ານເຄີຍຕັ້ງໄວ້ກັບເຮົາແລ້ວບໍ? ທ່ານລືມທຸກສິ່ງທີ່ເຮົາໄດ້ກ່າວກັບທ່ານແລ້ວບໍ? ທ່ານລືມເປົ້າໝາຍຂອງທ່ານທີ່ທ່ານຕັ້ງໄວ້ກັບເຮົາແລ້ວບໍ?" ເມື່ອເຫັນວ່ານັ້ນຄືພຣະເຢຊູ ເປໂຕຈຶ່ງລຸກຂຶ້ນຈາກບ່ອນນອນ ແລະ ພຣະເຢຊູກໍປອບໃຈລາວອີກວ່າ: "ເຮົາບໍ່ໄດ້ມາຈາກແຜ່ນດິນໂລກນີ້ ເຮົາໄດ້ບອກທ່ານໄປແລ້ວ ທ່ານຕ້ອງເຂົ້າໃຈໃນເລື່ອງນີ້ ທ່ານລືມອີກສິ່ງໜຶ່ງທີ່ເຮົາໄດ້ບອກທ່ານໄປແລ້ວບໍ? 'ທ່ານບໍ່ໄດ້ມາຈາກແຜ່ນດິນໂລກນີ້ເຊັ່ນກັນ ບໍ່ໄດ້ເປັນຂອງໂລກໜ່ວຍນີ້'. ຕອນນີ້ຍັງມີພາລະກິດທີ່ທ່ານຈຳເປັນຕ້ອງເຮັດ ທ່ານຈະໂສກເສົ້າແບບນີ້ບໍ່ໄດ້ ທ່ານຈະທົນທຸກທໍລະມານແບບນີ້ບໍ່ໄດ້. ເຖິງແມ່ນວ່າ ມະນຸດ ແລະ ພຣະເຈົ້າຈະບໍ່ສາມາດຢູ່ຮ່ວມກັນໃນໂລກນີ້ໄດ້ ເຮົາກໍມີພາລະກິດຂອງເຮົາ ທ່ານກໍມີພາລະກິດຂອງທ່ານ ແລະ ມື້ໜຶ່ງເມື່ອພາລະກິດຂອງທ່ານສຳເລັດ ພວກເຮົາກໍຈະໄດ້ຢູ່ຮ່ວມໂລກດຽວກັນ ແລະ ເຮົາຈະນຳເອົາທ່ານມາຢູ່ກັບເຮົາຕະຫຼອດໄປ". ຫລັງຈາກໄດ້ຍິນຄຳກ່າວເຫຼົ່ານີ້ ເປໂຕກໍຮູ້ສຶກສະບາຍໃຈຂຶ້ນ. ລາວຮູ້ວ່າຄວາມທໍລະມານດັ່ງກ່າວແມ່ນສິ່ງທີ່ລາວຕ້ອງໄດ້ອົດທົນ ແລະ ຜະເຊີນກັບມັນ ແລະ ນັບຕັ້ງແຕ່ນັ້ນມາ ລາວກໍໄດ້ຮັບການດົນບັນດານໃຈ. ພຣະເຢຊູປາກົດຕໍ່ໜ້າເປໂຕທຸກຄັ້ງໃນເວລາສຳຄັນ ເພື່ອໃຫ້ຄວາມສະຫວ່າງ ແລະ ໃຫ້ການຊີ້ນຳທີ່ພິເສດ ແລະ ພຣະອົງກໍປະຕິບັດວຽກງານເພື່ອຊ່ວຍກະຕຸ້ນຈິດວິນຍານຂອງລາວ. ແລ້ວເປໂຕເສຍໃຈກັບສິ່ງໃດຫຼາຍທີ່ສຸດ? ບໍ່ດົນຫລັງຈາກເປໂຕໄດ້ເວົ້າວ່າ: "ພຣະອົງແມ່ນ

ພຣະບຸດຂອງພຣະເຈົ້າທີ່ຊົງມີຊີວິດ", ພຣະເຢຊູຖາມຄຳຖາມຕໍ່ໄປກັບເປໂຕ (ເຖິງແມ່ນວ່າມັນຈະບໍ່ໄດ້ຖືກບັນທຶກໄວ້ໃນພຣະຄຳພີໃນທາງນີ້). ພຣະເຢຊູຖາມລາວວ່າ: "ເປໂຕ! ທ່ານບໍ່ເຄີຍຮັກເຮົາເລີຍບໍ?" ເປໂຕເຂົ້າໃຈຄວາມໝາຍຂອງພຣະເຢຊູດີ ແລະ ຕອບວ່າ: "ພຣະຜູ້ເປັນເຈົ້າ! ເມື່ອກ່ອນຂ້ານ້ອຍເຄີຍຮັກພຣະບິດາໃນສະຫວັນ ແຕ່ ຂ້ານ້ອຍຍອມຮັບວ່າ ຂ້ານ້ອຍບໍ່ເຄີຍຮັກພຣະອົງເລີຍ". ຫຼັງຈາກນັ້ນພຣະເຢຊູເລີຍຕອບວ່າ: "ຖ້າຜູ້ຄົນບໍ່ຮັກພຣະບິດາໃນສະຫວັນແລ້ວ ພວກເຂົາຈະຮັກພຣະບຸດໃນແຜ່ນດິນໂລກນີ້ໄດ້ແນວໃດ? ຖ້າຜູ້ຄົນບໍ່ຮັກພຣະບຸດທີ່ຖືກສົ່ງມາໂດຍພຣະເຈົ້າຜູ້ເປັນພຣະບິດາ ແລ້ວພວກເຂົາຈະຮັກພຣະບິດາໃນສະຫວັນໄດ້ແນວໃດ? ຖ້າຜູ້ຄົນຮັກພຣະບຸດໃນໂລກນີ້ແທ້ຈິງ ພວກເຂົາກໍຕ້ອງຮັກພຣະບິດາໃນສະຫວັນຢ່າງແທ້ຈິງເຊັ່ນກັນ". ເມື່ອເປໂຕໄດ້ຍິນຄຳກ່າວເຫຼົ່ານີ້ ລາວຮູ້ສຶກວ່າຕົນເອງຍັງຂາດເຂີນຫຼາຍ. ລາວຮູ້ສຶກເສຍໃຈສະເໝີຈົນເຖິງກັບຮ້ອງໄຫ້ ພ້ອມທັງເວົ້າວ່າ: "ຂ້ານ້ອຍເຄີຍຮັກພຣະບິດາໃນສະຫວັນ ແຕ່ຂ້ານ້ອຍບໍ່ເຄີຍຮັກພຣະອົງເລີຍ". ຫລັງຈາກການຟື້ນຄືນຊີວິດ ແລະ ການສະເດັດໄປຍັງສະຫວັນຂອງພຣະເຢຊູ ເປໂຕແຮງຮູ້ສຶກສຳນຶກຜິດ ແລະ ເສຍໃຈກັບຄຳເວົ້າເຫຼົ່ານີ້. ເມື່ອລາວຫວນຄິດຄືນຫລັງເຖິງພາລະກິດທີ່ຜ່ານມາ ແລະ ພາລະກິດໃນປັດຈຸບັນ ລາວມັກຈະຮຽກຮ້ອງຫາພຣະເຢຊູດ້ວຍຄຳອະທິຖານສະເໝີ, ລາວຮູ້ສຶກເສຍໃຈ ແລະ ຮູ້ສຶກຕິດໜີ້ພຣະຄຸນພຣະເຈົ້າຍ້ອນວ່າລາວບໍ່ສາມາດສະໜອງຄວາມປາຖະໜາຂອງພຣະອົງ ແລະ ບໍ່ສາມາດປະຕິບັດຕົນເອງໃຫ້ໄດ້ມາດຕະຖານທີ່ພຣະເຈົ້າໄດ້ຕັ້ງໄວ້. ບັນຫາເຫຼົ່ານີ້ກາຍເປັນພາລະທີ່ໜັກໜ່ວງ. ລາວກ່າວວ່າ: "ມື້ໜຶ່ງ ຂ້ານ້ອຍຈະອຸທິດທຸກຢ່າງ ແລະ ທຸກສິ່ງທີ່ຂ້ານ້ອຍມີໃຫ້ກັບພຣະອົງ ແລະ ຂ້ານ້ອຍຈະມອບທຸກສິ່ງທີ່ເປັນຄຸນຄ່າໃຫ້ກັບພຣະອົງ". ລາວກ່າວອີກວ່າ: "ພຣະເຈົ້າ! ຂ້ານ້ອຍມີພຽງຄວາມເຊື່ອດຽວ ແລະ ຄວາມຮັກດຽວ. ຊີວິດຂອງຂ້ານ້ອຍບໍ່ມີຄຸນຄ່າຫຍັງ ແລະ ຮ່າງກາຍຂອງຂ້ານ້ອຍກໍບໍ່ມີຄຸນຄ່າຫຍັງ. ຂ້ານ້ອຍມີພຽງຄວາມເຊື່ອດຽວ ແລະ ຄວາມຮັກດຽວ. ຂ້ານ້ອຍມີຄວາມເຊື່ອໃນພຣະເຈົ້າດ້ວຍຫົວໃຈ ແລະ ຄວາມຮັກທີ່ຈະມອບໃຫ້ພຣະອົງໃນຫົວໃຈ; ຂ້ານ້ອຍມີພຽງສອງສິ່ງນີ້ເທົ່ານັ້ນທີ່ຂໍມອບໃຫ້ພຣະອົງ ແລະ ບໍ່ມີຫຍັງອີກ". ເປໂຕໄດ້ຮັບກຳລັງໃຈຢ່າງຫຼວງຫຼາຍຈາກພຣະທຳຂອງພຣະເຢຊູ ເພາະວ່າກ່ອນພຣະເຢຊູຈະຖືກຄຶງຢູ່ເທິງໄມ້ກາງແຂນ ພຣະອົງໄດ້ກ່າວຕໍ່ເປໂຕວ່າ: "ເຮົາບໍ່ໄດ້ມາຈາກໂລກນີ້ ແລະ ທ່ານເຊັ່ນກັນບໍ່ໄດ້ມາຈາກໂລກນີ້". ຕໍ່ມາເມື່ອເປໂຕປະສົບກັບຄວາມເຈັບປວດຢ່າງຮ້າຍແຮງພຣະເຢຊູກໍໄດ້ເຕືອນລາວອີກວ່າ: "ເປໂຕ, ທ່ານໄດ້ລືມແລ້ວບໍ? ເຮົາບໍ່ໄດ້ມາຈາກໂລກນີ້ ແລະ ຍ້ອນໜ້າທີ່ຂອງເຮົາໆຈຶ່ງຕ້ອງຈາກໂລກນີ້ໄປ. ທ່ານເຊັ່ນກັນບໍ່ໄດ້ມາຈາກໂລກນີ້ ທ່ານລືມແລ້ວບໍ? ເຮົາໄດ້ບອກທ່ານສອງເທື່ອແລ້ວ ທ່ານບໍ່ຈື່ບໍ?" ເມື່ອໄດ້ຍິນແບບນັ້ນ, ເປໂຕກໍຕອບວ່າ: "ຂ້ານ້ອຍບໍ່ໄດ້ລືມ!" ພຣະເຢຊູເລີຍກ່າວຕໍ່ອີກວ່າ: "ຄັ້ງໜຶ່ງທ່ານເຄີຍໃຊ້ເວລາຢູ່ກັບເຮົາ ໃນສະຫວັນຢ່າງມີຄວາມສຸກ ແລະຊ່ວງເວລາໜຶ່ງກໍ່ຢູ່ຄຽງຂ້າງເຮົາ. ທ່ານຄິດຮອດເຮົາ ແລະ ເຮົາກໍຄິດຮອດທ່ານເຊັ່ນກັນ. ເຖິງແມ່ນວ່າໃນສາຍຕາເຮົາສິ່ງທີ່ມີຊີວິດທັງຫຼາຍແມ່ນບໍ່ມີຄຸນຄ່າພໍທີ່ເຮົາຈະກ່າວເຖິງ ແຕ່ຈະບໍ່ໃຫ້ເຮົາຮັກບຸກຄົນທີ່ໄຮ້ດຽງສາ ແລະ ມີຈິດໃຈງົດງາມຢ່າງທ່ານໄດ້ແນວໃດ? ທ່ານລືມຄຳສັນຍາຂອງເຮົາແລ້ວບໍ? ທ່ານຕ້ອງຮັບເອົາການຝາກຝັງຂອງເຮົາໃນໂລກນີ້; ທ່ານຕ້ອງບັນລຸໜ້າທີ່ທີ່ເຮົາມອບໝາຍໃຫ້ທ່ານ.

ແນ່ນອນ ມື້ໜຶ່ງເຮົາຈະພາທ່ານມາຢືນຢູ່ຄຽງຂ້າງເຮົາ". ຫລັງຈາກໄດ້ຍິນແບບນີ້, ເປໂຕຈຶ່ງມີກຳລັງໃຈຂຶ້ນ ແລະ ໄດ້ຮັບແຮງບັນດານໃຈຢ່າງໃຫຍ່ຫຼວງ, ເມື່ອເວລາທີ່ລາວຖືກຄຶງຢູ່ເທິງໄມ້ກາງແຂນນັ້ນລາວກໍ່ສາມາດກ່າວວ່າ: "ພຣະເຈົ້າ! ຂ້ານ້ອຍຮັກພຣະອົງຢ່າງສຸດຫົວໃຈ! ເຖິງແມ່ນວ່າ ພຣະອົງບອກໃຫ້ຂ້ານ້ອຍຕາຍ ຂ້ານ້ອຍກໍຈະຍັງຮັກພຣະອົງຢ່າງສຸດຫົວໃຈ. ບໍ່ວ່າພຣະອົງຈະສົ່ງວິນຍານຂອງຂ້ານ້ອຍໄປໃສກໍຕາມ, ບໍ່ວ່າພຣະອົງຈະປະຕິບັດຕາມຄຳສັນຍາໃນອະດີດຂອງພຣະອົງ ຫຼື ບໍ່, ຈາກນີ້ໄປບໍ່ວ່າພຣະອົງຈະກະທຳສິ່ງໃດກໍຕາມ ຂ້ານ້ອຍຂໍຮັກພຣະອົງ ແລະ ເຊື່ອໃນພຣະອົງຕະຫຼອດໄປ". ສິ່ງທີ່ເປໂຕຍຶດໝັ້ນກໍຄືຄວາມເຊື່ອ ແລະ ຄວາມຮັກທີ່ແທ້ຈິງ.

ໃນກາງຄືນຂອງມື້ໜຶ່ງ ມີສາວົກສອງສາມຄົນລວມທັງເປໂຕຢູ່ນຳກັນເທິງເຮືອຫາປາກັບພຣະເຢຊູ ແລະ ເປໂຕໄດ້ຖາມພຣະເຢຊູທີ່ເປັນຄຳຖາມໄຮ້ດຽງສາວ່າ: "ພຣະຜູ້ເປັນເຈົ້າ! ມີຄຳຖາມໜຶ່ງທີ່ຂ້ານ້ອຍຢາກຖາມພຣະອົງມາດົນແລ້ວ". ພຣະເຢຊູຕອບວ່າ: "ກະລຸນາຖາມມາເລີຍ!" ເປໂຕຈຶ່ງຖາມ: "ພາລະກິດທີ່ກະທຳໃນຍຸກພຣະບັນຍັດກໍແມ່ນພຣະອົງເປັນຜູ້ກະທຳບໍ?" ພຣະເຢຊູຍິ້ມຄືກັບກຳລັງເວົ້າວ່າ: "ເດັກນ້ອຍຄົນນີ້ຈັ່ງແມ່ນໄຮ້ດຽງສາແທ້ເດ!" ຫລັງຈາກນັ້ນພຣະອົງຈຶ່ງຕອບວ່າ: "ບໍ່ແມ່ນເຮົາເປັນຜູ້ກະທຳ ພຣະເຢໂຮວາ ແລະ ໂມເຊພຸ້ນເປັນຜູ້ກະທຳ". ເປໂຕໄດ້ຍິນເປັນເຊັ່ນນັ້ນກໍຮ້ອງຂຶ້ນໝົດແຮງ: "ໂອ້! ໝາຍຄວາມວ່າ ພຣະອົງບໍ່ໄດ້ກະທຳເນາະ". ເມື່ອພຣະເຢຊູໄດ້ຍິນເປໂຕເວົ້າມາແບບນັ້ນ ພຣະອົງກໍບໍ່ເວົ້າຫຍັງເພີ່ມອີກ. ເປໂຕເລີຍຄິດຢູ່ໃນໃຈຄົນດຽວ: "ບໍ່ແມ່ນທ່ານເປັນຄົນເຮັດເນາະ ສົມພໍທ່ານຈຶ່ງລົງມາທຳລາຍພຣະບັນຍັດ ຍ້ອນວ່າທ່ານບໍ່ໄດ້ສ້າງມັນຂຶ້ນມານີ້ເອງ". ລາວກໍ່ສະບາຍໃຈອີກດ້ວຍ. ຫຼັງຈາກນັ້ນ, ພຣະເຢຊູຮູ້ວ່າເປໂຕເປັນຄົນໄຮ້ດຽງສາ ແຕ່ເປັນເພາະວ່າໃນເວລານັ້ນລາວບໍ່ໄດ້ເຂົ້າໃຈພຣະເຢຊູຈຶ່ງບໍ່ໄດ້ກ່າວຫຍັງເພີ່ມ ຫຼື ຕອບໂຕ້ລາວໂດຍກົງ. ຫຼັງຈາກພຣະເຢຊູໄປກ່າວເທດສະໜາໃນທຳມະສາລາ ແລະ ມີຜູ້ຄົນເຂົ້າຮ່ວມຮັບຟັງຄຳກ່າວປະກາດຂອງພຣະອົງຢ່າງຫຼວງຫຼາຍ ລວມທັງເປໂຕພຣະເຢຊູຈຶ່ງໄດ້ກ່າວວ່າ: "ຜູ້ທີ່ຈະສະເດັດລົງມານີລັນດອນຈະມາປະຕິບັດພາລະກິດຂອງການໄຖ່ບາບໃນຍຸກແຫ່ງຄວາມກະລຸນາເພື່ອໄຖ່ມະນຸດທຸກຄົນໃຫ້ພົ້ນຈາກຄວາມຜິດບາບ ແຕ່ພຣະອົງຈະບໍ່ໄດ້ຖືກບັງຄັບໂດຍກົດລະບຽບໃດທັງສິ້ນໃນການນຳພາມະນຸດໃຫ້ລອດພົ້ນຈາກຄວາມຜິດບາບ. ພຣະອົງຈະຍ່າງອອກຈາກພຣະບັນຍັດ ແລະ ເຂົ້າສູ່ຍຸກແຫ່ງຄວາມກະລຸນາ. ພຣະອົງຈະໄຖ່ມະນຸດຊາດທັງປວງ. ພຣະອົງຈະກາວໄປຂ້າງໜ້າຈາກຍຸກແຫ່ງພຣະບັນຍັດສູ່ຍຸກແຫ່ງພຣະຄຸນ, ແຕ່ບໍ່ມີໃຜຮູ້ຈັກພຣະອົງເລີຍ, ພຣະອົງທີ່ມາຈາກພຣະເຢໂຮວາ. ພາລະກິດທີ່ໂມເຊໄດ້ກະທຳກໍແມ່ນມາຈາກພຣະເຢໂຮວາ; ໂມເຊອອກຮ່າງພຣະບັດຍັດກໍເພາະພາລະກິດທີ່ພຣະເຢໂຮວາໄດ້ກະທຳໄວ້ແລ້ວ". ຫຼັງຈາກທີ່ເວົ້າແບບນີ້, ພຣະອົງກໍ່ກ່າວຕໍ່: "ຜູ້ທີ່ລົບລ້າງພຣະບັນຍັດຂອງຍຸກແຫ່ງຄວາມກະລຸນາໃນລະຫວ່າງຍຸກແຫ່ງຄວາມກະລຸນານັ້ນຈະປະເຊີນກັບຄວາມຫາຍານະ. ພວກເຂົາຈະຕ້ອງຢືນຢູ່ໃນວິຫານ ແລະ ຮັບເອົາການທຳລາຍຂອງພຣະເຈົ້າ ແລະ ໄຟຈະມາຫາພວກເຂົາ". ການໄດ້ຟັງພຣະທຳເຫຼົ່ານີ້ຂ້ອນຂ້າງມີຜົນຕໍ່ເປໂຕ ແລະຕະຫຼອດຊ່ວງປະສົບການຂອງເປໂຕ, ພຣະເຢຊູໄດ້ນຳພາ ແລະ ຄ້ຳຊູເປໂຕ, ໂອ້ລົມເປໂຕດ້ວຍຄວາມຈິງໃຈ ເຊິ່ງເຮັດໃຫ້ເປໂຕເຂົ້າໃຈພຣະເຢຊູດີຂຶ້ນໜ້ອຍຂຶ້ນ. ໃນຂະນະທີ່ເປໂຕຄິດເຖິງຄຳກ່າວ

ປະກາດຂອງພຣະເຢຊູມື້ນັ້ນ ແລະ ຄຳຖາມທີ່ລາວໄດ້ຖາມພຣະອົງໃນຕອນພວກເຂົາຢູ່ເທິງເຮືອປະມົງ, ຄຳຕອບຂອງພຣະເຢຊູ ພ້ອມທັງວິທີທີ່ພຣະອົງຍິ້ມ, ໃນທີ່ສຸດ ເປໂຕໄດ້ເຂົ້າໃຈທຸກຢ່າງກ່ຽວກັບມັນ. ຫຼັງຈາກນັ້ນ, ພຣະວິນຍານບໍລິສຸດກໍໄດ້ໃຫ້ແສງສະຫວ່າງແກ່ເປໂຕ ແລະ ຍ້ອນສາເຫດດັ່ງກ່າວ ເປໂຕຈຶ່ງໄດ້ຮູ້ວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າຜູ້ຊົງມີຊີວິດຢູ່. ຄວາມເຂົ້າໃຈຂອງເປໂຕແມ່ນມາຈາກແສງສະຫວ່າງຂອງພຣະວິນຍານບໍລິສຸດ, ແຕ່ມີຂະບວນການໃນການເຂົ້າໃຈຂອງລາວເອງ. ມັນຜ່ານການສອບຖາມ, ການຮັບຟັງຄຳກ່າວປະກາດຂອງພຣະເຢຊູ, ແລ້ວຜ່ານການຮັບການສົນທະນາທີ່ພິເສດຂອງພຣະເຢຊູ ແລະ ການດູແລເບິ່ງແຍງທີ່ພິເສດຂອງພຣະອົງ, ເປໂຕຈຶ່ງຮູ້ວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າຊົງມີຊີວິດຢູ່. ຄວາມເຂົ້າໃຈດັ່ງກ່າວນີ້ບໍ່ແມ່ນຈະໄດ້ຮັບພຽງຄໍ່າຄືນດຽວ; ມັນເປັນວິທີການ ແລະ ສິ່ງນີ້ໄດ້ຊ່ວຍໃຫ້ລາວໃນປະສົບການໃນພາຍຫຼັງຂອງລາວ. ດ້ວຍເຫດໃດພຣະເຢຊູຈຶ່ງບໍ່ປະຕິບັດພາລະກິດການໄຖ່ບາບນີ້ຜ່ານຄົນອື່ນ ແຕ່ຜ່ານເປໂຕພຽງຄົນດຽວ? ນັ້ນກໍເພາະວ່າມີພຽງເປໂຕຄົນດຽວທີ່ເຂົ້າໃຈຢ່າງແທ້ຈິງໃນເລື່ອງພຣະເຢຊູເປັນພຣະບຸດຂອງພຣະເຈົ້າຜູ້ຊົງມີຊີວິດຢູ່; ນອກນັ້ນບໍ່ມີໃຜຮູ້ເລື່ອງນີ້ເລີຍ. ເຖິງແມ່ນວ່າຈະມີສາວົກຫຼາຍຄົນທີ່ຮູ້ຫຼາຍເລື່ອງໃນໄລຍະເວລາທີ່ພວກເຂົາໄດ້ຕິດຕາມພຣະອົງ ແຕ່ຄວາມຮູ້ຂອງເຂົາແມ່ນເປັນພຽງຄວາມຮູ້ແບບຜິວເຜີນເທົ່ານັ້ນ. ຍ້ອນສາເຫດນີ້ ເປໂຕຈຶ່ງຖືກເລືອກໂດຍພຣະເຢຊູໃຫ້ເປັນຕົວຢ່າງຂອງການສ້າງມະນຸດໃຫ້ສົມບູນແບບ. ສິ່ງທີ່ພຣະເຢຊູໄດ້ກ່າວຕໍ່ເປໂຕໃນເມື່ອກ່ອນກໍຄືສິ່ງທີ່ພຣະອົງພະຍາຍາມກ່າວຕໍ່ຜູ້ຄົນໃນທຸກມື້ນີ້, ເຊິ່ງຕ້ອງມີຄວາມຮູ້ ແລະ ທາງເຂົ້າຊີວິດທີ່ຢູ່ໃນລະດັບວິທີທາງຊີວິດຂອງເປໂຕ. ອີງຕາມເງື່ອນໄຂນີ້ ແລະ ຕາມຫົນທາງນີ້ເທົ່ານັ້ນທີ່ພຣະເຈົ້າຈະເຮັດໃຫ້ທຸກຄົນສົມບູນແບບ. ເຫດໃດຜູ້ຄົນທຸກມື້ນີ້ຈຶ່ງຕ້ອງການມີຄວາມເຊື່ອທີ່ແທ້ຈິງ ແລະ ຄວາມຮັກທີ່ແທ້ຈິງ? ພວກເຈົ້າກໍ່ເຊັ່ນກັນຕ້ອງປະສົບການໃດທີ່ເປໂຕໄດ້ປະສົບ; ໝາກຜົນໃດທີ່ເປໂຕໄດ້ຮັບຈາກປະສົບການກໍ່ຕ້ອງປາກົດຢູ່ໃນຕົວພວກເຈົ້າເຊັ່ນດຽວກັນ ແລະ ພວກເຈົ້າເຊັ່ນກັນຕ້ອງຜະເຊີນກັບຄວາມເຈັບປວດທີ່ເປໂຕໄດ້ຜ່ານ. ເສັ້ນທາງທີ່ພວກເຈົ້າເດີນ ກໍຄືເສັ້ນທາງທີ່ເປໂຕໄດ້ເດີນ. ຄວາມເຈັບປວດທີ່ພວກເຈົ້າປະສົບກໍຄືຄວາມເຈັບປວດທີ່ເປໂຕໄດ້ປະສົບມາແລ້ວ. ເມື່ອພວກເຈົ້າຮັບຄວາມສະຫງ່າລາສີ ແລະ ເມື່ອພວກເຈົ້າໃຊ້ຊີວິດທີ່ເປັນຢູ່ຕາມຊີວິດທີ່ເປັນຈິງ ເມື່ອນັ້ນພວກເຈົ້າແມ່ນໃຊ້ຊີວິດທີ່ເປັນຢູ່ໃນລັກສະນະຂອງເປໂຕ. ເສັ້ນທາງເດີນແມ່ນເໝືອນກັນ ແລະ ບຸກຄົນທີ່ປະຕິບັດຕາມວິທີທາງນີ້ເທົ່ານັ້ນຈຶ່ງຈະໄດ້ຖືກເຮັດໃຫ້ສົມບູນແບບ. ເຖິງຢ່າງໃດກໍຕາມ ຜູ້ຄົນທຸກມື້ນີ້ແມ່ນຈະຂາດຄວາມສາມາດ ຖ້າປຽບທຽບໃສ່ໃນຂອງເປໂຕເພາະຍ້ອນການເວລາໄດ້ປ່ຽນແປງ ແລະ ເຊັ່ນດຽວກັນນັ້ນ ຂອບເຂດຄວາມຊົ່ວຮ້າຍຂອງຜູ້ຄົນກໍເພີ່ມທະວີຂຶ້ນ ແລະ ຍ້ອນຢູເດຍເປັນພຽງອານາຈັກແຫ່ງວັດທະນະທຳບູຮານທີ່ມີມາແຕ່ດົນນານ. ສະນັ້ນ ພວກເຈົ້າຕ້ອງເຮັດທຸກຢ່າງທີ່ພວກເຈົ້າສາມາດເຮັດໄດ້ເພື່ອປັບປຸງຄວາມສາມາດຂອງພວກເຈົ້າໃຫ້ດີຂຶ້ນ.

ເປໂຕເປັນຄົນສະຫຼາດຫຼາຍ, ໃສ່ໃຈໃນທຸກສິ່ງທີ່ຕົນເອງກະທຳ ແລະ ລາວເປັນຄົນສັດຊື່ທີ່ສຸດ. ລາວຜະເຊີນອຸປະສັກຫຼາຍຢ່າງ. ລາວມາຮູ້ຈັກກັບສັງຄົມໃນຕອນອາຍຸ 14 ປີ ເມື່ອລາວເຂົ້າໂຮງຮຽນ

ແລະ ຍັງໄປທຳມະສາລານຳອີກ. ລາວມີຄວາມກະຕືລືລົ້ນຫຼາຍ ແລະ ເປັນຄົນມັກເຂົ້າຮ່ວມປະຊຸມຢູ່ສະເໝີ. ໃນເວລານັ້ນ ພຣະເຢຊູຍັງບໍ່ທັນໄດ້ປະຕິບັດພາລະກິດຂອງພຣະອົງເທື່ອ; ນີ້ແມ່ນພຽງການລິເລີ່ມຂອງຍຸກແຫ່ງຄວາມກະລຸນາ. ເປໂຕເລີ່ມມີການຕິດຕໍ່ພົວພັນກັບຜູ້ຄົນສຳຄັນທາງສາສະໜາເມື່ອອາຍຸລາວໄດ້ 14 ປີ; ພໍອາຍຸໄດ້ 18 ປີ ລາວໄດ້ຕິດຕໍ່ພົວພັນກັບຜູ້ນຳທາງສາສະໜາແລ້ວ ແຕ່ວ່າຫລັງຈາກລາວໄດ້ເຫັນເບື້ອງຫລັງຄວາມວຸ້ນວາຍຂອງສາສະໜາ ລາວກໍຖອນຕົວຈາກມັນ. ເມື່ອເຫັນວ່າຜູ້ຄົນເຫຼົ່ານີ້ມີເລ່ລ່ຽມ, ກົນອຸບາຍ ແລະ ການວາງແຜນຫຼາຍສໍ່າໃດ, ລາວເບື່ອໜ່າຍຫຼາຍ (ນີ້ແມ່ນວິທີທີ່ພຣະວິນຍານບໍລິສຸດປະຕິບັດວຽກງານໃນເວລານັ້ນເພື່ອເຮັດໃຫ້ລາວເປັນຄົນ ສົມບູນແບບ. ໂດຍພິເສດແລ້ວ ພຣະອົງດົນບັນດານລາວ ແລະ ໄດ້ປະຕິບັດພາລະກິດທີ່ພິເສດໃນຕົວລາວ) ແລະດ້ວຍເຫດນີ້ ເປໂຕຈຶ່ງຖອນໂຕອອກຈາກທຳມະສາລາເມື່ອຕອນອາຍຸ 18 ປີ. ພໍ່ແມ່ຂອງລາວກົດຂີ່ຂົ່ມເຫັງລາວ ແລະ ບໍ່ຍອມໃຫ້ເຊື່ອ (ພວກເຂົາເປັນມານຮ້າຍ ແລະ ຜູ້ບໍ່ເຊື່ອ). ໃນທີ່ສຸດ, ເປໂຕກໍໜີອອກຈາກເຮືອນ ແລະ ເດີນໄປຕາມທາງຂອງຕົນເອງ, ຫາປາ ແລະ ເທດສະໜາໄດ້ສອງປີ, ໃນໄລຍະນັ້ນລາວຍັງໄດ້ນຳພາສອງສາມຄົນ. ບັດນີ້ ເຈົ້າຄວນສາມາດເຫັນໄດ້ຢ່າງຈະແຈ້ງໃນທາງເດີນຂອງເປໂຕ. ຖ້າເຈົ້າສາມາດເຫັນທາງເດີນຂອງເປໂຕຢ່າງຈະແຈ້ງ, ແລ້ວເຈົ້າກໍຈະໝັ້ນໃຈກ່ຽວກັບພາລະກິດທີ່ກຳລັງປະຕິບັດໃນທຸກມື້ນີ້ ເພື່ອເຈົ້າຈະບໍ່ໄດ້ຈົ່ມວ່າ ຫຼື ເປັນຄົນຂີ້ຄ້ານ ຫຼື ຕ້ອງການສິ່ງໃດອີກ. ເຈົ້າຄວນຮັບຮູ້ໄດ້ເຖິງຄວາມຮູ້ສຶກຂອງເປໂຕໃນເວລານັ້ນ: ລາວຢູ່ກັບຄວາມໂສກເສົ້າເສຍໃຈ, ລາວບໍ່ເຄີຍຖາມເຖິງເລື່ອງອະນາຄົດ ຫຼື ຕ້ອງການພອນໃດໆ. ລາວບໍ່ໄດ້ສະແຫວງຫາຜົນກຳໄລ, ຄວາມສຸກສະບາຍ, ຊື່ສຽງ ຫຼື ໂຊກລາບຂອງໂລກນີ້; ລາວພຽງແຕ່ສະແຫວງຫາເພື່ອໃຊ້ຊີວິດທີ່ມີຄວາມໝາຍທີ່ສຸດ ເຊິ່ງເປັນການຕອບແທນຄວາມຮັກຂອງພຣະເຈົ້າທີ່ມີຕໍ່ລາວ ແລະ ອຸທິດສິ່ງທີ່ມີຄຸນຄ່າທີ່ສຸດສຳລັບລາວໃຫ້ກັບພຣະເຈົ້າ. ແລ້ວນັ້ນຄືສິ່ງທີ່ລາວເພິ່ງພໍໃຈທີ່ສຸດ. ລາວມັກອະທິຖານຫາພຣະເຢຊູຢູ່ສະເໝີດ້ວຍຄຳເວົ້າ: "ອົງພຣະເຢຊູຄຣິດເຈົ້າ, ຂ້ານ້ອຍເຄີຍຮັກພຣະອົງ ແຕ່ຂ້ານ້ອຍບໍ່ໄດ້ຮັກພຣະອົງຢ່າງຈິງໃຈເລີຍ. ເຖິງແມ່ນວ່າ ຂ້ານ້ອຍໄດ້ກ່າວວ່າຂ້ານ້ອຍມີຄວາມເຊື່ອໃນຕົວພຣະອົງ ແຕ່ຂ້ານ້ອຍບໍ່ເຄີຍຮັກພຣະອົງດ້ວຍຫົວໃຈທີ່ທ້ຈິງ. ຂ້ານ້ອຍພຽງແຕ່ເຄົາລົບພຣະອົງ, ບູຊາພຣະອົງ ແລະ ຄິດຮອດພຣະອົງ, ແຕ່ຂ້ານ້ອຍບໍ່ເຄີຍຮັກພຣະອົງ ຫຼື ມີຄວາມເຊື່ອໃນພຣະອົງຢ່າງແທ້ຈິງເລີຍ". ລາວມັກຈະອະທິຖານເພື່ອລຳລຶກເຖິງຄຳໝັ້ນສັນຍາຂອງລາວສະເໝີ ແລະ ລາວໄດ້ຮັບກຳລັງໃຈຈາກພຣະຄຳຂອງພຣະເຢຊູຕະຫຼອດເວລາ ແລະ ດຶງໃຊ້ແຮງຈູງໃຈຈາກພວກມັນ. ຕໍ່ມາ ຫລັງຈາກມີປະສົບການໄດ້ໄລຍະໜຶ່ງ ພຣະເຢຊູໄດ້ທົດລອງລາວ, ກະຕຸ້ນຈິດໃຈຂອງລາວໃຫ້ສະແຫວງຫາພຣະອົງເພີ່ມອີກ. ລາວເວົ້າວ່າ: "ອົງພຣະເຢຊູຄຣິດເຈົ້າ! ຂ້ານ້ອຍຄິດຮອດພຣະອົງ ແລະ ປາຖະໜາຢາກພົບພຣະອົງ. ຂ້ານ້ອຍມີຄວາມບົກຜ່ອງຫຼາຍ ແລະ ບໍ່ສາມາດຕອບແທນຄວາມຮັກພຣະອົງໄດ້. ຂ້ານ້ອຍອ້ອນວອນໃຫ້ພຣະອົງເອົາຂ້ານ້ອຍໄປໄວໆເທີດ. ເມື່ອໃດພຣະອົງຈະຕ້ອງການຂ້ານ້ອຍ? ເມື່ອໃດພຣະອົງຈະເອົາຂ້ານ້ອຍໄປ? ເມື່ອໃດຂ້ານ້ອຍຈະໄດ້ເຫັນໜ້າພຣະອົງອີກຄັ້ງ? ຂ້ານ້ອຍບໍ່ຕ້ອງການມີຊີວິດຢູ່ໃນຮ່າງກາຍນີ້ຕໍ່ໄປອີກແລ້ວ, ສືບຕໍ່ເປັນຄົນເສື່ອມຊາມ ຫຼື ຂ້ານ້ອຍບໍ່ປາຖະໜາທີ່ຈະຕໍ່ຕ້ານກັບຮ່າງກາຍ

ອັນຊົ່ວຮ້າຍນີ້ອີກ. ຂ້ານ້ອຍພ້ອມແລ້ວທີ່ຈະອຸທິດທຸກສິ່ງທຸກຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງ ໂດຍໄວທີ່ສຸດທີ່ຂ້ານ້ອຍຈະສາມາດກະທຳໄດ້ ແລະ ຂ້ານ້ອຍບໍ່ຢາກເຮັດໃຫ້ພຣະອົງເສົ້າໂສກເສຍໃຈອີກຕໍ່ໄປ". ນີ້ແມ່ນວິທີທີ່ເປໂຕກ່າວຄຳອະທິຖານ ແຕ່ໃນເວລານັ້ນລາວບໍ່ຮູ້ວ່າພຣະເຢຊູຈະເຮັດໃຫ້ລາວເປັນຄົນສົມບູນແບບ. ໃນລະຫວ່າງເປໂຕທົນທຸກທໍລະມານກັບການທົດລອງນັ້ນ ພຣະເຢຊູໄດ້ປາກົດຢູ່ຕໍ່ໜ້າລາວອີກຄັ້ງ ແລ້ວກ່າວວ່າ: "ເປໂຕ, ເຮົາຕ້ອງການເຮັດໃຫ້ທ່ານເປັນຄົນສົມບູນແບບ, ເພື່ອວ່າທ່ານຈະກາຍເປັນໝາກໄມ້ໜ່ວຍໜຶ່ງ ເຊິ່ງເປັນແກ້ວຜະລຶກຂອງການທີ່ເຮົາເຮັດໃຫ້ທ່ານສົມບູນແບບ ແລະເຮົາຈະຊື່ນຊົມທີ່ສຸດ. ທ່ານສາມາດເປັນພະຍານຝ່າຍເຮົາຢ່າງຈິງໃຈແທ້ບໍ? ທ່ານໄດ້ເຮັດໃນສິ່ງທີ່ເຮົາຂໍໃຫ້ທ່ານເຮັດແລ້ວບໍ? ທ່ານໄດ້ໃຊ້ຊີວິດທີ່ເປັນຢູ່ຕາມພຣະທຳທີ່ເຮົາໄດ້ກ່າວແກ່ທ່ານແລ້ວບໍ? ທ່ານເຄີຍຮັກເຮົາໃນຄັ້ງໜຶ່ງ, ແຕ່ເຖິງແມ່ນວ່າທ່ານໄດ້ຮັກເຮົາ ແຕ່ທ່ານໄດ້ໃຊ້ຊີວິດເພື່ອເຮົາຢູ່ບໍ? ມີສິ່ງໃດແດ່ທີ່ທ່ານເຮັດເພື່ອເຮົາ? ທ່ານຍອມຮັບວ່າທ່ານບໍ່ມີຄຸນຄ່າພໍທີ່ຈະໄດ້ຮັບຄວາມຮັກຈາກເຮົາ ແຕ່ທ່ານໄດ້ເຮັດສິ່ງໃດແດ່ເພື່ອເຮົາ?" ເປໂຕເຫັນວ່າ ຕົນເອງບໍ່ໄດ້ເຮັດຫຍັງເພື່ອພຣະເຢຊູເລີຍ ແລະ ຈື່ໄດ້ວ່າຄຳປະຕິຍານຂອງຕົນເອງຜ່ານມາແມ່ນມອບຊີວິດໃຫ້ກັບພຣະເຈົ້າ. ສະນັ້ນລາວຈຶ່ງບໍ່ຈົ່ມວ່າອີກຕໍ່ໄປ ແລະ ຄຳອະທິຖານຂອງລາວໃນເວລາຕໍ່ມາແມ່ນເລີ່ມດີຂຶ້ນ. ລາວໄດ້ອະທິຖານໂດຍເວົ້າວ່າ: "ອົງພຣະເຢຊູຄຣິດເຈົ້າ! ຂ້ານ້ອຍເຄີຍໜີຈາກພຣະອົງ ແລະ ພຣະອົງກໍເຄີຍຈາກຂ້ານ້ອຍເຊັ່ນກັນ. ພວກເຮົາໄດ້ໃຊ້ຊີວິດຢູ່ຄົນຕ່າງກັນ ແລະ ພວກເຮົາໄດ້ໃຊ້ຊີວິດຢູ່ຮ່ວມກັນ. ແຕ່ພຣະອົງຮັກຂ້ານ້ອຍຫຼາຍກວ່າສິ່ງອື່ນໃດ. ຂ້ານ້ອຍກະບົດຕໍ່ພຣະອົງຢູ່ເລື້ອຍໆ ແລະ ເຮັດໃຫ້ພຣະອົງທຸກໃຈນຳຂ້ານ້ອຍຢູ່ເລື້ອຍໆ. ຂ້ານ້ອຍຈະລືມສິ່ງເຫຼົ່ານີ້ໄດ້ແນວໃດ? ຂ້ານ້ອຍຈື່ຂຶ້ນໃຈ ແລະ ບໍ່ເຄີຍລືມພາລະກິດທີ່ພຣະອົງໄດ້ເຮັດໃນຕົວຂ້ານ້ອຍ ແລະ ສິ່ງທີ່ພຣະອົງໄດ້ຝາກຝັງໃຫ້ແກ່ຂ້ານ້ອຍ. ຂ້ານ້ອຍເຮັດທຸກສິ່ງທີ່ຂ້ານ້ອຍສາມາດເຮັດໄດ້ສຳລັບພາລະກິດທີ່ພຣະອົງເຮັດໃນຂ້ານ້ອຍ. ພຣະອົງຮູ້ດີໃນສິ່ງທີ່ຂ້ານ້ອຍສາມາດເຮັດໄດ້ ແລະ ພຣະອົງຮູ້ອີກວ່າຂ້ານ້ອຍສາມາດເຮັດບົດບາດໃດໄດ້. ຂ້ານ້ອຍປາຖະໜາທີ່ຈະຍອມຕໍ່ການປັ້ນແຕ່ງຂອງພຣະອົງ ແລະ ຂ້ານ້ອຍຂໍອຸທິດທຸກສິ່ງຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງ. ມີພຽງພຣະອົງຜູ້ດຽວທີ່ຮູ້ວ່າມີສິ່ງໃດແດ່ທີ່ຂ້ານ້ອຍສາມາດເຮັດເພື່ອພຣະອົງໄດ້. ເຖິງແມ່ນວ່າ ຊາຕານໄດ້ຫຼອກລວງຂ້ານ້ອຍຢ່າງໜັກ ແລະ ຂ້ານ້ອຍກະບົດຕໍ່ພຣະອົງ, ຂ້ານ້ອຍເຊື່ອວ່າ ພຣະອົງຈະບໍ່ຈົດຈຳຂ້ານ້ອຍຈາກການຝ່າຝືນເຫຼົ່ານັ້ນ ແລະ ພຣະອົງຈະບໍ່ປະຕິບັດກັບຂ້ານ້ອຍໂດຍອີງໃສ່ສິ່ງເຫຼົ່ານັ້ນ. ຂ້ານ້ອຍປາຖະນາທີ່ຈະອຸທິດຊີວິດທັງໝົດຂອງຂ້ານ້ອຍໃຫ້ກັບພຣະອົງ. ຂ້ານ້ອຍບໍ່ຂໍສິ່ງໃດ ແລະ ຂ້ານ້ອຍບໍ່ໄດ້ຫວັງສິ່ງໃດ ແລະ ບໍ່ມີແຜນການອັນໃດ; ຂ້ານ້ອຍພຽງແຕ່ປາຖະໜາທີ່ຈະປະຕິບັດຕາມເຈດຕະນາຂອງພຣະອົງ ແລະ ເຮັດຕາມຄວາມປະສົງຂອງພຣະອົງ. ຂ້ານ້ອຍຈະດື່ມຈາກຈອກທີ່ຂົມຂື່ນຂອງພຣະອົງ ແລະ ຂ້ານ້ອຍຈະຢູ່ພາຍໃຕ້ຄຳສັ່ງຂອງພຣະອົງ".

ພວກເຈົ້າຕ້ອງຊັດເຈນກັບທາງເດີນທີ່ພວກເຈົ້າເດີນ; ພວກເຈົ້າຕ້ອງຊັດເຈນກັບວິທີທາງທີ່ພວກເຈົ້າຈະປະຕິບັດຕາມໃນອະນາຄົດ, ແມ່ນຫຍັງຄືສິ່ງທີ່ພຣະເຈົ້າຈະເຮັດໃຫ້ສົມບູນແບບ ແລະແມ່ນຫຍັງຄືສິ່ງທີ່ໄດ້ມອບໝາຍໃຫ້ກັບພວກເຈົ້າ. ມື້ໜຶ່ງ ບາງເທື່ອ ພວກເຈົ້າຈະໄດ້ຖືກທົດລອງ ແລະ

ເມື່ອເວລານັ້ນມາຮອດ ຖ້າພວກເຈົ້າສາມາດໄດ້ຮັບແຮງຈູງໃຈຈາກປະສົບການຂອງເປໂຕ, ມັນກໍຈະສະແດງໃຫ້ເຫັນວ່າ ພວກເຈົ້າກຳລັງເດີນຕາມທາງຂອງເປໂຕຢ່າງແທ້ຈິງ. ເປໂຕໄດ້ຮັບຄຳຊົມເຊີຍຈາກພຣະເຈົ້າຍ້ອນຄວາມເຊື່ອ ແລະ ຄວາມຮັກ ແລະ ຄວາມຈົງຮັກພັກດີທີ່ແທ້ຈິງຂອງລາວທີ່ມີຕໍ່ພຣະເຈົ້າ. ດ້ວຍຄວາມສັດຊື່ ແລະ ການປາຖະໜາຫາພຣະເຈົ້າໃນຫົວໃຈຂອງລາວ, ພຣະເຈົ້າຈຶ່ງເຮັດໃຫ້ລາວເປັນຄົນສົມບູນແບບ. ຖ້າພວກເຈົ້າມີຄວາມຮັກ ແລະ ຄວາມເຊື່ອທີ່ແທ້ຈິງເໝືອນເປໂຕ, ແລ້ວພຣະເຢຊູຈະເຮັດໃຫ້ພວກເຈົ້າເປັນຄົນສົມບູນແບບຢ່າງແນ່ນອນ.

# ເມື່ອປະສົບກັບການຫຼໍ່ຫຼອມເທົ່ານັ້ນ ມະນຸດຈຶ່ງສາມາດມີຄວາມຮັກຢ່າງແທ້ຈິງ

ພວກເຈົ້າທຸກຄົນຢູ່ໃນທ່າມກາງການທົດລອງ ແລະ ການຫຼໍ່ຫຼອມ. ເຈົ້າຄວນຮັກພຣະເຈົ້າແນວໃດໃນລະຫວ່າງການຫຼໍ່ຫຼອມ? ເມື່ອໄດ້ປະສົບກັບການຫຼໍ່ຫຼອມ, ໃນລະຫວ່າງການຫຼໍ່ຫຼອມ ຜູ້ຄົນສາມາດມອບການສັນລະເສີນທີ່ແທ້ຈິງໃຫ້ແກ່ພຣະເຈົ້າ ແລະ ທ່າມກາງການຫຼໍ່ຫຼອມ ພວກເຂົາສາມາດເຫັນວ່າພວກເຂົາກຳລັງຂາດເຂີນຢ່າງຫຼວງຫຼາຍ. ຍິ່ງການຫຼໍ່ຫຼອມຍິ່ງໃຫຍ່ຫຼາຍສໍ່າໃດ, ເຈົ້າຍິ່ງສາມາດປະຖິ້ມເນື້ອໜັງຫຼາຍສໍ່ານັ້ນ; ຍິ່ງການຫຼໍ່ຫຼອມຂອງຜູ້ຄົນຍິ່ງໃຫຍ່ຫຼາຍສໍ່າໃດ, ພວກເຂົາຍິ່ງມີຄວາມຮັກສຳລັບພຣະເຈົ້າຫຼາຍສໍ່ານັ້ນ. ນີ້ແມ່ນສິ່ງທີ່ພວກເຈົ້າຕ້ອງເຂົ້າໃຈ. ເປັນຫຍັງຜູ້ຄົນຕ້ອງຖືກຫຼໍ່ຫຼອມ? ການຫຼໍ່ຫຼອມແມ່ນແນໃສ່ເພື່ອບັນລຸຫຍັງ? ແມ່ນຫຍັງຄືຄວາມສຳຄັນຂອງພາລະກິດແຫ່ງການຫຼໍ່ຫຼອມຂອງພຣະເຈົ້າທີ່ຢູ່ໃນມະນຸດ? ຖ້າເຈົ້າສະແຫວງຫາພຣະເຈົ້າຢ່າງແທ້ຈິງ, ແລ້ວການໄດ້ປະສົບກັບການຫຼໍ່ຫຼອມຂອງພຣະອົງຈົນເຖິງຈຸດໃດໜຶ່ງ ເຈົ້າຈະຮູ້ສຶກວ່າ ມັນດີຫຼາຍ ແລະ ເປັນສິ່ງທີ່ຈຳເປັນທີ່ສຸດ. ມະນຸດຄວນຮັກພຣະເຈົ້າແນວໃດໃນລະຫວ່າງການຫຼໍ່ຫຼອມ? ໂດຍການຕັ້ງໃຈຮັກພຣະເຈົ້າເພື່ອຍອມຮັບເອົາການຫຼໍ່ຫຼອມຂອງພຣະອົງ ນັ້ນກໍຄື ໃນລະຫວ່າງການຫຼໍ່ຫຼອມ ເຈົ້າທໍລະມານຢູ່ຂ້າງໃນ, ຄືກັບວ່າ ມີມີດສຽບບິດຢູ່ໃນຫົວໃຈຂອງເຈົ້າ, ແຕ່ເຈົ້າກໍເຕັມໃຈທີ່ຈະເຮັດໃຫ້ພຣະເຈົ້າພໍໃຈໂດຍໃຊ້ຫົວໃຈຂອງເຈົ້າຮັກພຣະອົງ ແລະ ເຈົ້າກໍບໍ່ເຕັມໃຈທີ່ຈະສົນໃຈເນື້ອໜັງ. ນີ້ແມ່ນຄວາມໝາຍຂອງການປະຕິບັດຄວາມຮັກຕໍ່ພຣະເຈົ້າ. ເຈົ້າເຈັບຢູ່ຂ້າງໃນ ແລະ ການທົນທຸກຂອງເຈົ້າແມ່ນເຖິງຈຸດໃດໜຶ່ງ ແຕ່ເຈົ້າກໍຍັງເຕັມໃຈທີ່ຈະມາຢູ່ຕໍ່ໜ້າພຣະເຈົ້າ ແລະ ອະທິຖານວ່າ "ໂອ ພຣະເຈົ້າ! ຂ້ານ້ອຍບໍ່ສາມາດຈາກພຣະອົງໄປໄດ້. ເຖິງແມ່ນວ່າມີຄວາມມືດຢູ່ພາຍໃນຕົວຂ້ານ້ອຍ, ຂ້ານ້ອຍກໍປາຖະໜາທີ່ຈະເຮັດໃຫ້ພຣະອົງພໍໃຈ; ພຣະອົງຮູ້ຈັກຫົວໃຈຂອງຂ້ານ້ອຍ ແລະ ຂ້ານ້ອຍຂໍຮ້ອງໃຫ້ພຣະອົງມອບຄວາມຮັກຂອງພຣະອົງໃນຕົວຂ້ານ້ອຍຫຼາຍຂຶ້ນ". ນີ້ແມ່ນການປະຕິບັດໃນລະຫວ່າງການຫຼໍ່ຫຼອມ. ຖ້າເຈົ້າໃຊ້ຄວາມຮັກທີ່ມີຕໍ່ພຣະເຈົ້າເປັນພື້ນຖານ, ການຫຼໍ່ຫຼອມສາມາດນຳເຈົ້າໃຫ້ເຂົ້າໃກ້ພຣະເຈົ້າໄດ້ ແລະ ເຮັດໃຫ້ເຈົ້າໃກ້ຊິດກັບພຣະເຈົ້າຫຼາຍຍິ່ງຂຶ້ນ. ຍ້ອນເຈົ້າເຊື່ອໃນພຣະເຈົ້າ, ເຈົ້າຕ້ອງມອບຫົວໃຈຂອງເຈົ້າຢູ່ຕໍ່ໜ້າພຣະເຈົ້າ. ຖ້າເຈົ້າຖວາຍ ແລະ ວາງຫົວໃຈຂອງເຈົ້າຕໍ່ໜ້າພຣະເຈົ້າ, ແລ້ວໃນລະຫວ່າງການຫຼໍ່ຫຼອມ ມັນເປັນໄປບໍ່ໄດ້ທີ່ເຈົ້າຈະປະຕິເສດພຣະເຈົ້າ ຫຼື ໜີຈາກພຣະເຈົ້າໄປ. ດ້ວຍວິທີນີ້ ຄວາມສຳພັນຂອງເຈົ້າກັບພຣະເຈົ້າກໍຈະຍິ່ງໃກ້ຊິດຂຶ້ນກວ່າເກົ່າ ແລະ ຍິ່ງເປັນປົກກະຕິຫຼາຍຂຶ້ນ ແລະ ຄວາມສະໜິດຂອງເຈົ້າກັບພຣະເຈົ້າກໍຈະຫຼາຍຂຶ້ນ. ຖ້າເຈົ້າປະຕິບັດແບບນີ້ຢູ່ສະເໝີ, ແລ້ວເຈົ້າກໍຈະໃຊ້ເວລາຫຼາຍຍິ່ງຂຶ້ນໃນແສງສະຫວ່າງຂອງພຣະເຈົ້າ ແລະ ໃຊ້ເວລາຢູ່ພາຍໃຕ້ການນຳພາຂອງພຣະທຳຂອງພຣະອົງຫຼາຍຂຶ້ນ. ມີການປ່ຽນແປງຫຼາຍຂຶ້ນເລື້ອຍໆໃນອຸປະນິໄສຂອງເຈົ້າ ແລະ ຄວາມຮູ້ຂອງເຈົ້າກໍຈະເພີ່ມຂຶ້ນໃນແຕ່ລະມື້. ເມື່ອມື້ນັ້ນມາເຖິງ ມື້ທີ່ການທົດລອງຂອງພຣະເຈົ້າເກີດຂຶ້ນກັບເຈົ້າທັນທີ, ເຈົ້າຈະບໍ່ພຽງແຕ່ສາມາດຢືນຢູ່ຂ້າງພຣະເຈົ້າເທົ່ານັ້ນ, ແຕ່ຈະສາມາດ

ເປັນພະຍານໃຫ້ກັບພຣະເຈົ້າອີກດ້ວຍ. ໃນເວລານັ້ນ, ເຈົ້າຈະເປັນຄືກັບໂຢບ ແລະ ເປໂຕ. ເມື່ອໄດ້ເປັນພະຍານໃຫ້ກັບພຣະເຈົ້າ ເຈົ້າຈະຮັກພຣະອົງຢ່າງແທ້ຈິງ ແລະ ຍິນດີທີ່ຈະມອບຊີວິດຂອງເຈົ້າໃຫ້ກັບພຣະອົງ; ເຈົ້າຈະເປັນພະຍານຂອງພຣະເຈົ້າ ແລະ ເປັນຄົນທີ່ພຣະເຈົ້າຮັກ. ຄວາມຮັກທີ່ໄດ້ຜ່ານການຫຼໍ່ຫຼອມເປັນສິ່ງໝັ້ນຄົງ ແລະ ບໍ່ອ່ອນແອ. ບໍ່ວ່າພຣະເຈົ້າຈະວາງເຈົ້າໄວ້ໃນການທົດລອງຂອງພຣະອົງເມື່ອໃດ ຫຼື ແນວໃດກໍຕາມ, ເຈົ້າກໍຈະສາມາດປ່ອຍວາງຄວາມກັງວົນຂອງເຈົ້າ ບໍ່ວ່າເຈົ້າຈະເປັນ ຫຼື ຕາຍ, ປະຖິ້ມທຸກສິ່ງເພື່ອພຣະເຈົ້າດ້ວຍຄວາມຍິນດີ ແລະ ອົດກັ້ນຕໍ່ທຸກສິ່ງຢ່າງມີຄວາມສຸກເພື່ອພຣະເຈົ້າ, ສະນັ້ນ ຄວາມຮັກຂອງເຈົ້າກໍຈະບໍລິສຸດ ແລະ ຄວາມເຊື່ອຂອງເຈົ້າກໍຈະເປັນຈິງ. ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະກາຍເປັນຄົນທີ່ພຣະເຈົ້າຮັກແທ້ຈິງ ແລະ ຄົນທີ່ຖືກພຣະເຈົ້າເຮັດໃຫ້ສົມບູນຢ່າງແທ້ຈິງ.

ຖ້າຜູ້ຄົນຕົກຢູ່ພາຍໃຕ້ອິດທິພົນຂອງຊາຕານ, ແລ້ວພາຍໃນຕົວພວກເຂົາກໍຈະບໍ່ມີຄວາມຮັກສຳລັບພຣະເຈົ້າ ແລະ ນິມິດ, ຄວາມຮັກ ແລະ ການຕັດສິນໃຈທີ່ຜ່ານມາຂອງພວກເຂົາກໍຫາຍໄປ. ຜູ້ຄົນເຄີຍຮູ້ສຶກວ່າ ພວກເຂົາຕ້ອງທົນທຸກເພື່ອພຣະເຈົ້າ, ແຕ່ໃນປັດຈຸບັນ ພວກເຂົາຄິດວ່າ ການເຮັດແບບນັ້ນເປັນເລື່ອງອັບອາຍ ແລະ ພວກເຂົາມີແຕ່ຄຳຕໍ່ວ່າຢູ່ບໍ່ຂາດ. ນີ້ແມ່ນພາລະກິດຂອງຊາຕານ; ເປັນສັນຍານບອກວ່າ ມະນຸດໄດ້ຕົກຢູ່ພາຍໃຕ້ອຳນາດຂອງຊາຕານ. ຖ້າເຈົ້າພະເຊີນກັບສະພາບນີ້ ເຈົ້າຕ້ອງອະທິຖານ ແລະ ຫັນກັບຄືນໃຫ້ໄວເທົ່າທີ່ຈະໄວໄດ້, ສິ່ງນີ້ຈະປົກປ້ອງເຈົ້າຈາກການໂຈມຕີຂອງຊາຕານ. ໃນລະຫວ່າງການຫຼໍ່ຫຼອມຢ່າງຂົມຂື່ນ ມະນຸດສາມາດຕົກຢູ່ພາຍໃຕ້ອິດທິພົນຂອງຊາຕານຢ່າງງ່າຍດາຍທີ່ສຸດ, ສະນັ້ນ ເຈົ້າຄວນຮັກພຣະເຈົ້າແນວໃດໃນລະຫວ່າງການຫຼໍ່ຫຼອມນັ້ນ? ເຈົ້າຄວນຮວບໂຮມຄວາມຕັ້ງໃຈຂອງເຈົ້າ, ວາງຫົວໃຈຂອງເຈົ້າຢູ່ຕໍ່ໜ້າພຣະເຈົ້າ ແລະ ອຸທິດເວລາສຸດທ້າຍຂອງເຈົ້າໃຫ້ກັບພຣະອົງ. ບໍ່ວ່າພຣະເຈົ້າຈະຫຼໍ່ຫຼອມເຈົ້າແນວໃດກໍຕາມ, ເຈົ້າຄວນສາມາດນຳຄວາມຈິງເຂົ້າສູ່ການປະຕິບັດເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ເຈົ້າຄວນສະໝັກໃຈໃນການສະແຫວງຫາພຣະເຈົ້າ ແລະ ສະແຫວງຫາຄວາມສະໜິດກັບພຣະເຈົ້າ. ໃນເວລາແບບນີ້, ຍິ່ງເຈົ້າຂີ້ຄ້ານຫຼາຍສໍ່າໃດ, ເຈົ້າຍິ່ງມີຄວາມຄິດລົບຫຼາຍສໍ່ານັ້ນ ແລະ ມັນຍິ່ງງ່າຍສຳລັບເຈົ້າຈະທໍ້ຖອຍໃຈ. ເມື່ອມັນຈຳເປັນທີ່ເຈົ້າຕ້ອງຮັບໃຊ້ໜ້າທີ່ຂອງເຈົ້າ, ເຖິງແມ່ນວ່າ ເຈົ້າບໍ່ໄດ້ຮັບໃຊ້ຢ່າງດີ, ເຈົ້າກໍຈົ່ງເຮັດດ້ວຍຄວາມສາມາດຂອງເຈົ້າ ແລະ ເຮັດດ້ວຍຄວາມຮັກທີ່ເຈົ້າມີໃຫ້ກັບພຣະເຈົ້າ; ບໍ່ວ່າຄົນອື່ນຈະເວົ້າຫຍັງກໍຕາມ, ບໍ່ວ່າພວກເຂົາຈະເວົ້າວ່າເຈົ້າໄດ້ເຮັດດີ ຫຼື ເຈົ້າເຮັດບໍ່ດີ, ເຈດຕະນາຂອງເຈົ້າແມ່ນຖືກຕ້ອງແລ້ວ ແລະ ເຈົ້າກໍບໍ່ແມ່ນຄົນທີ່ຄິດວ່າຕົນເອງຊອບທຳ ຍ້ອນວ່າ ເຈົ້າກຳລັງປະຕິບັດແທນພຣະເຈົ້າ. ເມື່ອຄົນອື່ນຕີຄວາມໝາຍເຈົ້າຜິດ, ເຈົ້າກໍສາມາດອະທິຖານຫາພຣະເຈົ້າ ແລະ ເວົ້າວ່າ “ໂອ ພຣະເຈົ້າ! ຂ້ານ້ອຍບໍ່ຮຽກຮ້ອງໃຫ້ຄົນອື່ນອົດທົນກັບຂ້ານ້ອຍ ຫຼື ປະຕິບັດຕໍ່ຂ້ານ້ອຍຢ່າງດີ ຫຼື ໃຫ້ພວກເຂົາເຂົ້າໃຈ ຫຼື ເຫັນດ້ວຍກັບຂ້ານ້ອຍ. ຂ້ານ້ອຍພຽງແຕ່ຂໍໃຫ້ຂ້ານ້ອຍສາມາດຮັກພຣະອົງໃນຫົວໃຈຂອງຂ້ານ້ອຍ, ໃຫ້ຂ້ານ້ອຍສະບາຍໃຈໃນຫົວໃຈຂອງຂ້ານ້ອຍ ແລະ ໃຫ້ສະຕິຂອງຂ້ານ້ອຍຊັດເຈນ. ຂ້ານ້ອຍບໍ່ຮຽກຮ້ອງໃຫ້ຄົນອື່ນຍ້ອງຍໍຂ້ານ້ອຍ ຫຼື ນັບຖືຂ້ານ້ອຍຢ່າງສູງສົ່ງ; ຂ້ານ້ອຍພຽງແຕ່ສະແຫວງຫາເພື່ອເຮັດໃຫ້ພຣະອົງພໍໃຈ ຈາກຫົວໃຈຂອງຂ້ານ້ອຍ, ຂ້ານ້ອຍເຮັດບົດບາດຂອງຂ້ານ້ອຍໂດຍການເຮັດທຸກ

ສິ່ງທີ່ຂ້ານ້ອຍສາມາດເຮັດໄດ້ ແລະ ເຖິງແມ່ນວ່າ ຂ້ານ້ອຍໂງ່ຈ້າ, ເຂົ້າໃຈໄດ້ຍາກ, ມີຄວາມສາມາດທີ່ຕໍ່າ ແລະ ຕາບອດ, ຂ້ານ້ອຍຮູ້ວ່າ ພຣະອົງເປັນຕາຮັກ ແລະ ຂ້ານ້ອຍກໍເຕັມໃຈອຸທິດທຸກສິ່ງທີ່ຂ້ານ້ອຍມີໃຫ້ກັບພຣະອົງ". ຫລັງຈາກທີ່ເຈົ້າອະທິຖານແບບນີ້, ຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າກໍຈະປາກົດຂຶ້ນ ແລະ ເຈົ້າກໍຈະຮູ້ສຶກສະບາຍໃຈຫຼາຍຂຶ້ນໃນຫົວໃຈຂອງເຈົ້າ. ນີ້ແມ່ນຄວາມໝາຍຂອງການປະຕິບັດຄວາມຮັກທີ່ມີຕໍ່ພຣະເຈົ້າ. ໃນຂະນະທີ່ເຈົ້າກໍາລັງປະສົບກັບສິ່ງນີ້, ເຈົ້າຈະລົ້ມເຫຼວສອງຄັ້ງ ແລະ ສໍາເລັດໜຶ່ງຄັ້ງ ຫຼື ບໍ່ດັ່ງນັ້ນກໍລົ້ມເຫຼວຫ້າຄັ້ງ ແລະ ສໍາເລັດສອງຄັ້ງ ແລະ ໃນຂະນະທີ່ເຈົ້າກໍາລັງປະສົບແບບນີ້, ມີແຕ່ໃນຄວາມລົ້ມເຫຼວເທົ່ານັ້ນ ເຈົ້າຈຶ່ງຈະສາມາດເຫັນຄວາມເປັນຕາຮັກຂອງພຣະເຈົ້າ ແລະ ຄົ້ນພົບສິ່ງທີ່ຂາດຢູ່ພາຍໃນເຈົ້າໄດ້. ເມື່ອເຈົ້າພະເຊີນກັບສະຖານະການເຊັ່ນນີ້ໃນຄັ້ງໜ້າ, ເຈົ້າຄວນເຕືອນຕົນເອງ, ເຮັດໃຫ້ບາດກ້າວຂອງເຈົ້າເບົາລົງ ແລະ ອະທິຖານຫຼາຍຂຶ້ນກວ່າເກົ່າ. ເຈົ້າຈະພັດທະນາຄວາມສາມາດເອົາຊະນະສະຖານະການດັ່ງກ່າວເທື່ອລະໜ້ອຍ. ເມື່ອສິ່ງນັ້ນເກີດຂຶ້ນ, ຄໍາອະທິຖານຂອງເຈົ້າກໍຈະມີປະສິດທິພາບ. ເມື່ອເຈົ້າເຫັນວ່າ ເຈົ້າປະສົບຜົນສໍາເລັດໃນຄັ້ງນີ້, ເຈົ້າກໍຈະພໍໃຈຢູ່ຂ້າງໃນ ແລະ ເມື່ອເຈົ້າອະທິຖານ ເຈົ້າກໍຈະສາມາດຮູ້ສຶກເຖິງພຣະເຈົ້າ ແລະ ການສະຖິດຂອງພຣະວິນຍານບໍລິສຸດກໍບໍ່ໄດ້ຈາກເຈົ້າໄປໃສ, ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະຮູ້ຈັກວິທີທີ່ພຣະເຈົ້າປະຕິບັດພາລະກິດພາຍໃນຕົວເຈົ້າ. ການປະຕິບັດໃນລັກສະນະນີ້ຈະມອບເສັ້ນທາງສູ່ປະສົບການໃຫ້ກັບເຈົ້າ. ຖ້າເຈົ້າບໍ່ນໍາຄວາມຈິງເຂົ້າສູ່ການປະຕິບັດ, ແລ້ວເຈົ້າກໍຈະບໍ່ມີການສະຖິດຂອງພຣະວິນຍານບໍລິສຸດພາຍໃນເຈົ້າ. ແຕ່ຖ້າເຈົ້ານໍາຄວາມຈິງນັ້ນເຂົ້າສູ່ການປະຕິບັດ ເມື່ອເຈົ້າພົບກັບສິ່ງທີ່ພວກເຂົາເປັນ, ແລ້ວເຖິງແມ່ນວ່າເຈົ້າຈະເຈັບປວດຢູ່ຂ້າງໃນ, ໃນທີ່ສຸດ ພຣະວິນຍານບໍລິສຸດກໍຈະຢູ່ກັບເຈົ້າຫຼັງຈາກນັ້ນ, ເຈົ້າຈະສາມາດຮູ້ສຶກເຖິງການສະຖິດຂອງພຣະເຈົ້າ ເມື່ອເຈົ້າອະທິຖານ, ເຈົ້າຈະມີກໍາລັງປະຕິບັດພຣະທໍາຂອງພຣະເຈົ້າ ແລະ ໃນລະຫວ່າງການສາມັກຄີທໍາກັບອ້າຍເອື້ອຍນ້ອງຂອງເຈົ້າ ເຈົ້າຈະບໍ່ມີຫຍັງປົກຄຸມສະຕິຂອງເຈົ້າ ແລະ ເຈົ້າຈະຮູ້ສຶກສະຫງົບສຸກ ແລະ ດ້ວຍວິທີນີ້ ເຈົ້າຈະສາມາດນໍາສິ່ງທີ່ເຈົ້າໄດ້ເຮັດໄປສູ່ແສງສະຫວ່າງ. ບໍ່ວ່າຄົນອື່ນຈະເວົ້າແນວໃດກໍຕາມ, ເຈົ້າຈະສາມາດມີຄວາມສໍາພັນກັບພຣະເຈົ້າຢ່າງເປັນປົກກະຕິ, ເຈົ້າຈະບໍ່ຖືກຄົນອື່ນຈໍາກັດ, ເຈົ້າຈະລຸກຂຶ້ນເໜືອທຸກສິ່ງ ແລະ ດ້ວຍສິ່ງນີ້ ເຈົ້າຈະສະແດງໃຫ້ເຫັນວ່າ ການທີ່ເຈົ້າປະຕິບັດພຣະທໍາຂອງພຣະເຈົ້າ ແມ່ນມີປະສິດທິພາບແລ້ວ.

ຍິ່ງການທົ່ທູອມຂອງພຣະເຈົ້າຍິ່ງໃຫຍ່ຫຼາຍສໍ່າໃດ, ຫົວໃຈຂອງຜູ້ຄົນກໍສາມາດຮັກພຣະເຈົ້າຫຼາຍສໍ່ານັ້ນ. ຄວາມທໍລະມານທີ່ຢູ່ໃນຫົວໃຈຂອງພວກເຂົາເປັນປະໂຫຍດຕໍ່ຊີວິດຂອງພວກເຂົາ, ພວກເຂົາສາມາດສະຫງົບສຸກຢູ່ຕໍ່ໜ້າພຣະເຈົ້າໄດ້ຫຼາຍຂຶ້ນ, ຄວາມສໍາພັນຂອງພວກເຂົາກັບພຣະເຈົ້າກໍໃກ້ຊິດຂຶ້ນ ແລະ ພວກເຂົາສາມາດເຫັນເຖິງຄວາມຮັກສູງສຸດຂອງພຣະເຈົ້າ ແລະ ຄວາມລອດພົ້ນສູງສຸດຂອງພຣະອົງໄດ້ດີຂຶ້ນ. ເປໂຕປະສົບກັບການທົ່ທູອມຫຼາຍຮ້ອຍຄັ້ງ ແລະ ໂຢບປະສົບກັບການທົດລອງຫຼາຍຄັ້ງ. ຖ້າພວກເຈົ້າປາຖະໜາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ, ພວກເຈົ້າຕ້ອງປະສົບກັບການທົ່ທູອມຫຼາຍຮ້ອຍຄັ້ງເຊັ່ນດຽວກັນ; ມີພຽງແຕ່ພວກເຈົ້າຜ່ານຂະບວນການນີ້ ແລະ ເພິ່ງພາບາດກ້າວນີ້ເທົ່ານັ້ນ, ເຈົ້າຈຶ່ງຈະສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້ ແລະ ຖືກພຣະເຈົ້າເຮັດໃຫ້

ສົມບູນ. ການຫຼໍ່ຫຼອມແມ່ນຫົນທາງທີ່ດີທີ່ສຸດທີ່ພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນ; ການຫຼໍ່ຫຼອມ ແລະ ການທົດລອງຢ່າງໜັກເທົ່ານັ້ນ ຈຶ່ງຈະສາມາດນຳຄວາມຮັກໃນຫົວໃຈຂອງຜູ້ຄົນທີ່ມີຕໍ່ພຣະເຈົ້າອອກມາໄດ້. ຫາກປາສະຈາກຄວາມລຳບາກ, ຜູ້ຄົນກໍຂາດຄວາມຮັກທີ່ມີຕໍ່ພຣະເຈົ້າຢ່າງແທ້ຈິງ; ຖ້າພວກເຂົາບໍ່ຖືກທົດສອບຢູ່ພາຍໃນ, ຖ້າພວກເຂົາບໍ່ຖືກປ່ອຍໃຫ້ຕົກຢູ່ໃນການຫຼໍ່ຫຼອມຢ່າງແທ້ຈິງ, ແລ້ວຫົວໃຈຂອງພວກເຂົາກໍຈະເລື່ອນລອຍຢູ່ຂ້າງນອກຕະຫຼອດເວລາ. ເມື່ອຖືກຫຼໍ່ຫຼອມຈົນຮອດຈຸດໃດໜຶ່ງ, ເຈົ້າຈະເຫັນຄວາມອ່ອນແອ ແລະ ຄວາມຫຍຸ້ງຍາກຂອງເຈົ້າເອງ, ເຈົ້າຈະເຫັນວ່າ ເຈົ້າກຳລັງຂາດເຂີນຫຼາຍສໍ່າໃດ ແລະ ເຈົ້າຈະບໍ່ສາມາດເອົາຊະນະບັນຫາຕ່າງໆທີ່ເຈົ້າຜະເຊີນຢູ່ ແລະ ເຈົ້າຈະເຫັນວ່າຄວາມບໍ່ເຊື່ອຟັງຂອງເຈົ້ານັ້ນຍິ່ງໃຫຍ່ສໍ່າໃດ. ຢູ່ໃນລະຫວ່າງການທົດລອງເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດຮູ້ສະພາວະທີ່ແທ້ຈິງຂອງພວກເຂົາແທ້; ການທົດລອງເຮັດໃຫ້ຜູ້ຄົນສົມບູນຍິ່ງຂຶ້ນ.

ໃນລະຫວ່າງເວລາຊົ່ວຊີວິດຂອງເພິ່ນ, ເປໂຕປະສົບກັບການຫຼໍ່ຫຼອມຫຼາຍຮ້ອຍຄັ້ງ ແລະ ຜ່ານປະສົບການຢ່າງທາລຸນຫຼາຍຄັ້ງ. ການຫຼໍ່ຫຼອມນີ້ກາຍເປັນພື້ນຖານຂອງຄວາມຮັກສູງສຸດທີ່ເພິ່ນມີໃຫ້ກັບພຣະເຈົ້າ ແລະ ເປັນປະສົບການທີ່ສຳຄັນທີ່ສຸດຕະຫຼອດທັງຊີວິດຂອງເພິ່ນ. ເຫດຜົນໜຶ່ງທີ່ເພິ່ນສາມາດມີຄວາມຮັກສູງສຸດໃຫ້ກັບພຣະເຈົ້າກໍຍ້ອນຄວາມຕັ້ງໃຈຂອງເພິ່ນທີ່ຈະຮັກພຣະເຈົ້າ; ເຖິງຢ່າງໃດກໍຕາມ ສຳຄັນໄປກວ່ານັ້ນ ມັນແມ່ນຍ້ອນການຫຼໍ່ຫຼອມ ແລະ ການທົນທຸກທີ່ເພິ່ນໄດ້ປະສົບ. ການທົນທຸກນີ້ໄດ້ກາຍເປັນເຄື່ອງນຳທາງໃນເສັ້ນທາງແຫ່ງການຮັກພຣະເຈົ້າ ແລະ ເປັນສິ່ງທີ່ໜ້າຈົດຈຳທີ່ສຸດສຳລັບເພິ່ນ. ຖ້າຜູ້ຄົນບໍ່ໄດ້ປະສົບກັບຄວາມເຈັບປວດໃນການຫຼໍ່ຫຼອມ ໃນເວລາທີ່ຮັກພຣະເຈົ້າ, ແລ້ວຄວາມຮັກຂອງພວກເຂົາກໍຈະເຕັມໄປດ້ວຍຄວາມບໍ່ບໍລິສຸດ ແລະ ອີງຕາມຄວາມມັກຂອງພວກເຂົາເອງ; ຄວາມຮັກແບບນີ້ແມ່ນເຕັມໄປດ້ວຍແນວຄິດຂອງຊາຕານ ແລະ ໂດຍພື້ນຖານແລ້ວບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າເລີຍ. ການມີຄວາມຕັ້ງໃຈຮັກພຣະເຈົ້າບໍ່ຄືກັບການຮັກພຣະເຈົ້າແທ້ຈິງ. ເຖິງແມ່ນວ່າ ທຸກສິ່ງທີ່ພວກເຂົາຄິດໃນຫົວໃຈຂອງພວກເຂົາແມ່ນເພື່ອເຫັນແກ່ການຮັກພຣະເຈົ້າ ແລະ ເຮັດໃຫ້ພຣະເຈົ້າພໍໃຈ ແລະ ເຖິງແມ່ນວ່າ ຄວາມຄິດຂອງພວກເຂົາ ຄືກັບວ່າອຸທິດໃຫ້ກັບພຣະເຈົ້າທັງໝົດ ແລະ ປາສະຈາກຄວາມຄິດຕ່າງໆຂອງມະນຸດ, ແຕ່ເມື່ອຄວາມຄິດຂອງພວກເຂົາຖືກນຳມາຢູ່ຕໍ່ໜ້າພຣະເຈົ້າ, ພຣະອົງກໍບໍ່ໄດ້ຍົກຍ້ອງ ຫຼື ໃຫ້ພອນຄວາມຄິດດັ່ງກ່າວນັ້ນ. ແມ່ນແຕ່ເມື່ອຜູ້ຄົນໄດ້ເຂົ້າໃຈຄວາມຈິງທັງໝົດ, ເມື່ອພວກເຂົາໄດ້ຮຽນຮູ້ຈັກຄວາມຈິງທັງໝົດ ນີ້ກໍບໍ່ສາມາດເວົ້າໄດ້ວ່າ ມັນເປັນເຄື່ອງໝາຍສະແດງໃຫ້ເຫັນເຖິງການຮັກພຣະເຈົ້າ, ມັນບໍ່ສາມາດເວົ້າໄດ້ວ່າຄົນເຫຼົ່ານີ້ຮັກພຣະເຈົ້າແທ້ຈິງ. ເຖິງແມ່ນຜູ້ຄົນຈະເຂົ້າໃຈຄວາມຈິງຫຼາຍຢ່າງໂດຍບໍ່ໄດ້ຜ່ານປະສົບການຫຼໍ່ຫຼອມກໍຕາມ, ພວກເຂົາກໍບໍ່ສາມາດນຳຄວາມຈິງເຫຼົ່ານັ້ນເຂົ້າສູ່ການປະຕິບັດໄດ້; ມີພຽງໃນລະຫວ່າງການຫຼໍ່ຫຼອມເທົ່ານັ້ນ ຜູ້ຄົນຈຶ່ງສາມາດເຂົ້າໃຈເຖິງຄວາມໝາຍທີ່ແທ້ຈິງຂອງຄວາມຈິງເຫຼົ່ານີ້, ມີພຽງເມື່ອນັ້ນ ຜູ້ຄົນຈຶ່ງສາມາດເຫັນຄຸນຄ່າຄວາມໝາຍພາຍໃນຂອງພວກເຂົາຢ່າງແທ້ຈິງ. ໃນເວລານັ້ນ, ເມື່ອພວກເຂົາພະຍາຍາມອີກຄັ້ງ, ພວກເຂົາກໍຈະສາມາດນຳຄວາມຈິງເຂົ້າສູ່ການປະຕິບັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ; ໃນເວລານັ້ນ, ແນວຄິດມະນຸດຂອງພວກເຂົາກໍຈະມີ

ໜ້ອຍລົງ, ຄວາມເສື່ອມຊາມຂອງມະນຸດຂອງພວກເຂົາໄດ້ຫຼຸດລົງ ແລະ ຄວາມຮູ້ສຶກແບບມະນຸດຂອງພວກເຂົາກໍຫຼຸດລົງ; ມີແຕ່ໃນເວລານັ້ນ ການປະຕິບັດຂອງພວກເຂົາຈຶ່ງຈະເປັນການສະແດງອອກເຖິງຄວາມຮັກທີ່ມີຕໍ່ພຣະເຈົ້າຢ່າງແທ້ຈິງ. ຜົນຂອງຄວາມຈິງກ່ຽວກັບຄວາມຮັກທີ່ມີຕໍ່ພຣະເຈົ້າ ບໍ່ໄດ້ຖືກບັນລຸດ້ວຍຄວາມຮູ້ທີ່ເວົ້າອອກມາ ຫຼື ທາງດ້ານຄວາມຄິດ ຫຼື ມັນບໍ່ສາມາດບັນລຸໄດ້ໂດຍການເຂົ້າໃຈຄວາມຈິງດັ່ງກ່າວພຽງຢ່າງດຽວ. ມັນຮຽກຮ້ອງໃຫ້ຜູ້ຄົນຈ່າຍລາຄາ ແລະ ພວກເຂົາຕ້ອງປະສົບກັບຄວາມຂົມຂື່ນຫຼາຍຢ່າງໃນລະຫວ່າງການຫຼໍ່ຫຼອມ ແລະ ມີແຕ່ເມື່ອນັ້ນ ຄວາມຮັກຂອງພວກເຂົາຈຶ່ງຈະບໍລິສຸດ ແລະ ເປັນໄປຕາມໃຈຂອງພຣະເຈົ້າ. ໃນຄວາມຕ້ອງການໃຫ້ມະນຸດຮັກພຣະອົງ, ພຣະເຈົ້າບໍ່ໄດ້ຮຽກຮ້ອງໃຫ້ມະນຸດຮັກພຣະອົງໂດຍໃຊ້ຄວາມຫຼົງໄຫຼ ຫຼື ຄວາມປະສົງຂອງເຂົາເອງ; ມີພຽງຜ່ານຄວາມຊື່ສັດ ແລະ ການນຳໃຊ້ຄວາມຈິງເພື່ອຮັບໃຊ້ພຣະອົງເທົ່ານັ້ນ ມະນຸດຈຶ່ງສາມາດຮັກພຣະອົງໄດ້ຢ່າງແທ້ຈິງ. ແຕ່ມະນຸດດຳລົງຊີວິດທ່າມກາງຄວາມເສື່ອມຊາມ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ສາມາດໃຊ້ຄວາມຈິງ ແລະ ຄວາມຊື່ສັດເພື່ອຮັບໃຊ້ພຣະເຈົ້າໄດ້. ເຂົາຫຼົງໄຫຼພຣະເຈົ້າຫຼາຍເກີນໄປ ຫຼື ເຢັນຊາ ຫຼື ບໍ່ສົນໃຈເກີນໄປ, ເຂົາຮັກພຣະເຈົ້າຈົນເຖິງທີ່ສຸດ ຫຼື ກຽດຊັງພຣະອົງຈົນເຖິງທີ່ສຸດ. ຜູ້ຄົນທີ່ດຳລົງຊີວິດຢູ່ທ່າມກາງຄວາມເສື່ອມຊາມແມ່ນມັກຈະດຳລົງຊີວິດໃນລະຫວ່າງສອງສິ່ງນີ້ສະເໝີ, ດຳລົງຊີວິດໂດຍຄວາມປະສົງຂອງພວກເຂົາເອງຢູ່ສະເໝີ ແຕ່ເຊື່ອວ່າ ພວກເຂົາຖືກຕ້ອງ. ເຖິງແມ່ນວ່າ ເຮົາໄດ້ກ່າວສິ່ງນີ້ຄັ້ງແລ້ວຄັ້ງເລົ່າ, ຜູ້ຄົນກໍບໍ່ສາມາດຮັບເອົາມັນຢ່າງຈິງຈັງໄດ້, ພວກເຂົາບໍ່ສາມາດເຂົ້າໃຈເຖິງຄວາມສຳຄັນຂອງມັນແທ້ຈິງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງດຳລົງຊີວິດທ່າມກາງຄວາມເຊື່ອທີ່ຫຼອກລວງຕົນເອງ, ຢູ່ໃນຄວາມຮັກທີ່ລວງຕາສຳລັບພຣະເຈົ້າໂດຍເພິ່ງພາຄວາມດື້ດ້ານຂອງພວກເຂົາ. ຕະລອດທັງປະຫວັດສາດ, ເມື່ອມະນຸດຊາດໄດ້ພັດທະນາ ແລະ ຍຸກຕ່າງໆໄດ້ຜ່ານໄປ, ຄວາມຕ້ອງການທີ່ພຣະເຈົ້າມີຕໍ່ມະນຸດຍິ່ງສູງຂຶ້ນກວ່າເກົ່າ ແລະ ພຣະອົງຮຽກຮ້ອງໃຫ້ມະນຸດເດັດຂາດຕໍ່ພຣະອົງກໍເພີ່ມຂຶ້ນ. ແຕ່ຄວາມຮູ້ຂອງມະນຸດພັດຍິ່ງກາຍເປັນສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ເປັນນາມມະທຳຍິ່ງຂຶ້ນເລື້ອຍໆ ແລະ ສິ່ງທີ່ຕາມມາກໍຄືຄວາມຮັກທີ່ເຂົາມີຕໍ່ພຣະເຈົ້າກາຍເປັນສິ່ງທີ່ບໍ່ບໍລິສຸດຫຼາຍຂຶ້ນເລື້ອຍໆ. ສະພາວະຂອງມະນຸດ ແລະ ທຸກສິ່ງທີ່ເຂົາເຮັດບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າຫຼາຍຂຶ້ນ ຍ້ອນມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມຫຼາຍຂຶ້ນກວ່າເກົ່າ. ສິ່ງນີ້ຮຽກຮ້ອງໃຫ້ພຣະເຈົ້າປະຕິບັດພາລະກິດແຫ່ງຄວາມລອດພົ້ນຫຼາຍຂຶ້ນ ແລະ ຍິ່ງໃຫຍ່ຂຶ້ນ. ມະນຸດຕ້ອງການຄວາມຮຽກຮ້ອງຈາກພຣະເຈົ້າຫຼາຍຂຶ້ນເລື້ອຍໆ ແລະ ຄວາມຮັກທີ່ເຂົາມີຕໍ່ພຣະເຈົ້າກໍຍິ່ງລົດນ້ອຍຖອຍລົງເລື້ອຍໆ. ຜູ້ຄົນດຳລົງຊີວິດຢູ່ໃນຄວາມບໍ່ເຊື່ອຟັງ, ປາສະຈາກຄວາມຈິງ ແລະ ດຳລົງຊີວິດຢູ່ໂດຍປາສະຈາກຄວາມເປັນມະນຸດ; ບໍ່ແມ່ນແຕ່ພວກເຂົາບໍ່ມີຄວາມຮັກໃຫ້ກັບພຣະເຈົ້າແມ່ນແຕ່ໜ້ອຍດຽວເທົ່ານັ້ນ, ແຕ່ພວກເຂົາຍັງເຕັມໄປດ້ວຍຄວາມບໍ່ເຊື່ອຟັງ ແລະ ການຕໍ່ຕ້ານ. ເຖິງແມ່ນວ່າ ພວກເຂົາຄິດວ່າພວກເຂົາມີຄວາມຮັກຫຼາຍທີ່ສຸດໃຫ້ກັບພຣະເຈົ້າ ທີ່ພວກເຂົາບໍ່ສາມາດຕອບສະໜອງໃຫ້ກັບພຣະອົງໄດ້ຫຼາຍກວ່ານີ້ອີກແລ້ວ, ພຣະເຈົ້າກໍບໍ່ໄດ້ເຊື່ອວ່າເປັນເຊັ່ນນັ້ນ. ມັນຊັດເຈນທີ່ສຸດສຳລັບພຣະອົງແລ້ວວ່າ ຄວາມຮັກທີ່ມະນຸດມີໃຫ້ກັບພຣະອົງນັ້ນມີມົນທິນຫຼາຍສໍ່າໃດ ແລະ ພຣະອົງບໍ່ເຄີຍປ່ຽນແປງຄວາມເຫັນຂອງພຣະອົງ

ກ່ຽວກັບມະນຸດ ຍ້ອນການເອົາໃຈຂອງມະນຸດຈັກເທື່ອ ຫຼື ບໍ່ເຄີຍຕອບແທນຄວາມປາຖະໜາດີຂອງມະນຸດ ຍ້ອນການອຸທິດຂອງເຂົາ. ບໍ່ຄືກັບມະນຸດ, ພຣະເຈົ້າສາມາດແຍກແຍະໄດ້ ນັ້ນກໍຄື ພຣະອົງຮູ້ຈັກວ່າ ໃຜທີ່ຮັກພຣະອົງຢ່າງແທ້ຈິງ ແລະ ໃຜທີ່ບໍ່ໄດ້ຮັກ ແລະ ແທນທີ່ຈະຖືກຄອບງຳດ້ວຍຄວາມຈິງໃຈ ແລະ ສູນເສຍຕົວພຣະອົງ ຍ້ອນແຮງບັນດານໃຈພຽງຊົ່ວຄາວຂອງມະນຸດ, ພຣະອົງປະຕິບັດຕໍ່ມະນຸດຕາມແກ່ນແທ້ ແລະ ການປະພຶດຂອງມະນຸດ. ໃນທີ່ສຸດ ພຣະເຈົ້າກໍເປັນພຣະເຈົ້າ ແລະ ພຣະອົງມີກຽດສັກສີຂອງພຣະອົງ ແລະ ມີຄວາມເຂົ້າໃຈຂອງພຣະອົງ; ໃນທີ່ສຸດ ມະນຸດກໍເປັນມະນຸດ ແລະ ຫົວຂອງພຣະເຈົ້າຈະບໍ່ຫັນໂດຍຄວາມຮັກຂອງມະນຸດທີ່ບໍ່ສອດຄ່ອງກັບຄວາມຈິງ. ກົງກັນຂ້າມ, ພຣະອົງປະຕິບັດຕໍ່ທຸກສິ່ງທີ່ມະນຸດເຮັດຢ່າງເໝາະສົມ.

ເມື່ອພົບກັບສະພາວະຂອງມະນຸດ ແລະ ທ່າທີທີ່ມະນຸດມີຕໍ່ພຣະເຈົ້າ, ພຣະເຈົ້າໄດ້ປະຕິບັດພາລະກິດໃໝ່ ເຮັດໃຫ້ມະນຸດມີທັງຄວາມຮູ້ ແລະ ຄວາມເຊື່ອຟັງຕໍ່ພຣະອົງ ແລະ ທັງຄວາມຮັກ ແລະ ຄຳພະຍານ. ສະນັ້ນ ມະນຸດຕ້ອງປະສົບກັບການຫຼໍ່ຫຼອມທີ່ພຣະເຈົ້າມີໃຫ້ກັບພວກເຂົາ ພ້ອມດ້ວຍການພິພາກສາຂອງພຣະອົງ, ການຈັດການ ແລະ ການລິຮານພວກເຂົາ ເຊິ່ງຖ້າຫາກປາສະຈາກສິ່ງນັ້ນ ມະນຸດຈະບໍ່ຮູ້ຈັກພຣະເຈົ້າຈັກເທື່ອ ແລະ ຈະບໍ່ສາມາດຮັກ ແລະ ເປັນພະຍານໃຫ້ກັບພຣະອົງຢ່າງແທ້ຈິງຈັກເທື່ອ. ການຫຼໍ່ຫຼອມທີ່ພຣະເຈົ້າມີໃຫ້ກັບມະນຸດ ບໍ່ແມ່ນພຽງແຕ່ເພື່ອຜົນສະທ້ອນດ້ານດຽວ, ແຕ່ເພື່ອຜົນສະທ້ອນຫຼາຍດ້ານ. ມີພຽງແຕ່ໃນວິທີນີ້ເທົ່ານັ້ນ ພຣະເຈົ້າຈະປະຕິບັດພາລະກິດແຫ່ງການຫຼໍ່ຫຼອມໃນຜູ້ຄົນທີ່ເຕັມໃຈສະແຫວງຫາຄວາມຈິງ, ເພື່ອວ່າ ຄວາມຕັ້ງໃຈ ແລະ ຄວາມຮັກຂອງພວກເຂົາຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ສຳລັບຄົນທີ່ເຕັມໃຈສະແຫວງຫາຄວາມຈິງ ແລະ ຄົນທີ່ປາຖະໜາຫາພຣະເຈົ້າ, ບໍ່ມີສິ່ງໃດທີ່ມີຄວາມໝາຍຫຼາຍກວ່ານີ້ ຫຼື ເປັນປະໂຫຍດຫຼາຍກວ່າການຫຼໍ່ຫຼອມແບບນີ້. ອຸປະນິໄສຂອງພຣະເຈົ້າບໍ່ໄດ້ເປັນທີ່ຮູ້ຈັກ ຫຼື ເຂົ້າໃຈໂດຍມະນຸດຢ່າງງ່າຍດາຍ, ເພາະໃນທີ່ສຸດພຣະເຈົ້າກໍເປັນພຣະເຈົ້າ. ໃນທີ່ສຸດ ມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະມີອຸປະນິໄສຄືກັບມະນຸດ ແລະ ດ້ວຍເຫດນັ້ນ ມັນບໍ່ງ່າຍສຳລັບມະນຸດທີ່ຈະຮູ້ຈັກອຸປະນິໄສຂອງພຣະອົງ. ມະນຸດບໍ່ໄດ້ມີຄວາມຈິງໂດຍທຳມະຊາດ ແລະ ຄົນທີ່ຖືກຊາຕານເຮັດໃຫ້ເສື່ອມຊາມຈະບໍ່ເຂົ້າໃຈສິ່ງນີ້ຢ່າງງ່າຍດາຍ; ມະນຸດປາສະຈາກຄວາມຈິງ ແລະ ຂາດຄວາມເດັດດ່ຽວທີ່ຈະນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ຖ້າເຂົາບໍ່ທົນທຸກ ແລະ ບໍ່ຖືກຫຼໍ່ຫຼອມ ຫຼື ຖືກພິພາກສາ, ແລ້ວຄວາມຕັ້ງໃຈຂອງເຂົາຈະບໍ່ຖືກເຮັດໃຫ້ສົມບູນຈັກເທື່ອ. ສຳລັບທຸກຄົນ, ການຫຼໍ່ຫຼອມແມ່ນເຈັບປວດຫຼາຍ ແລະ ຍາກທີ່ຈະຮັບໄດ້, ແຕ່ໃນລະຫວ່າງການຫຼໍ່ຫຼອມນີ້ ທີ່ພຣະເຈົ້າເຮັດໃຫ້ອຸປະນິໄສທີ່ຊອບທຳຂອງພຣະອົງຊັດເຈນຕໍ່ມະນຸດ ແລະ ເປີດເຜີຍສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ ແລະ ໃຫ້ຄວາມສະຫວ່າງຫຼາຍຂຶ້ນ ແລະ ດຳເນີນການລິຮານ ແລະ ການຈັດການຢ່າງແທ້ຈິງຫຼາຍຂຶ້ນ; ຜ່ານການປຽບທຽບລະຫວ່າງຂໍ້ມູນ ແລະ ຄວາມຈິງ, ພຣະອົງມອບຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບມະນຸດເອງ ແລະ ຄວາມຈິງໃຫ້ກັບພວກເຂົາ ແລະ ມອບຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຄວາມປະສົງຂອງພຣະເຈົ້າ, ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ມະນຸດມີຄວາມຮັກທີ່ເປັນຈິງ ແລະ ບໍລິສຸດຫຼາຍຂຶ້ນສຳລັບພຣະເຈົ້າ. ສິ່ງດັ່ງກ່າວແມ່ນເປົ້າໝາຍຂອງພຣະເຈົ້າໃນການດຳເນີນ

ການຫຼໍ່ຫຼອມ. ພາລະກິດທຸກຢ່າງທີ່ພຣະເຈົ້າກະທຳໃນມະນຸດ ແມ່ນມີເປົ້າໝາຍ ແລະ ຄວາມສຳຄັນຂອງມັນເອງ; ພຣະເຈົ້າບໍ່ປະຕິບັດພາລະກິດທີ່ບໍ່ມີຄວາມໝາຍ ຫຼື ພຣະອົງບໍ່ປະຕິບັດພາລະກິດທີ່ບໍ່ເປັນປະໂຫຍດໃຫ້ກັບມະນຸດ. ການຫຼໍ່ຫຼອມບໍ່ໄດ້ໝາຍເຖິງການກຳຈັດຜູ້ຄົນອອກຈາກການຢູ່ຕໍ່ໜ້າພຣະເຈົ້າ ຫຼື ມັນບໍ່ໄດ້ໝາຍເຖິງການທຳລາຍພວກເຂົາໃນນະຮົກ. ກົງກັນຂ້າມ ມັນໝາຍເຖິງການປ່ຽນແປງອຸປະນິໄສຂອງມະນຸດໃນລະຫວ່າງການຫຼໍ່ຫຼອມ, ປ່ຽນແປງເຈດຕະນາຂອງເຂົາ, ທັດສະນະດັ່ງເດີມຂອງເຂົາ, ປ່ຽນແປງຄວາມຮັກທີ່ເຂົາມີຕໍ່ພຣະເຈົ້າ ແລະ ປ່ຽນແປງຊີວິດທັງໝົດຂອງເຂົາ. ການຫຼໍ່ຫຼອມແມ່ນການທົດສອບທີ່ແທ້ຈິງຂອງມະນຸດ ແລະ ເປັນແບບຟອມຂອງການຝຶກຝົນທີ່ເປັນຈິງ ແລະ ໃນລະຫວ່າງການຫຼໍ່ຫຼອມເທົ່ານັ້ນ ຄວາມຮັກຂອງເຂົາຈຶ່ງສາມາດປະຕິບັດໜ້າທີ່ຕາມທຳມະຊາດຂອງມັນ.

# ຄົນທີ່ຮັກພຣະເຈົ້າຈະດຳລົງຊີວິດຢູ່ພາຍໃນແສງສະຫວ່າງຂອງພຣະອົງຕະຫຼອດໄປ

ແກ່ນແທ້ຂອງຄວາມເຊື່ອໃນພຣະເຈົ້າຂອງຄົນສ່ວນໃຫຍ່ແມ່ນຄວາມເຊື່ອໃນສາສະໜາ ນັ້ນກໍຄື ພວກເຂົາບໍ່ສາມາດຮັກພຣະເຈົ້າໄດ້ ແລະ ພຽງແຕ່ສາມາດຕິດຕາມພຣະເຈົ້າຄືກັບຫຸ່ນຍົນ ໂດຍບໍ່ສາມາດປາດຖະໜາຫາພຣະເຈົ້າ ຫຼື ເຄົາລົບນັບຖືພຣະອົງໄດ້ຢ່າງແທ້ຈິງ. ພວກເຂົາພຽງແຕ່ຕິດຕາມພຣະອົງຢ່າງງຽບໆ. ຫຼາຍຄົນເຊື່ອໃນພຣະເຈົ້າ ແຕ່ມີໜ້ອຍຄົນທີ່ຮັກພຣະເຈົ້າ; ພວກເຂົາພຽງແຕ່ "ບູຊາ" ພຣະເຈົ້າຍ້ອນພວກເຂົາຢ້ານໄພພິບັດ ຫຼື ບໍ່ດັ່ງນັ້ນ ພວກເຂົາກໍ "ນັບຖື" ພຣະເຈົ້າຍ້ອນພຣະອົງສູງສົ່ງ ແລະ ມີລິດທານຸພາບສູງສຸດ, ແຕ່ໃນການບູຊາ ແລະ ຄວາມນັບຖືຂອງພວກເຂົານັ້ນບໍ່ມີຄວາມຮັກ ຫຼື ຄວາມປາຖະໜາຢ່າງແທ້ຈິງເລີຍ. ໃນປະສົບການຂອງພວກເຂົາ, ພວກເຂົາສະແຫວງຫາຂໍ້ມູນເລັກນ້ອຍຂອງຄວາມຈິງ ຫຼື ບໍ່ກໍເປັນສິ່ງເລິກລັບທີ່ບໍ່ສຳຄັນ. ຄົນສ່ວນໃຫຍ່ພຽງແຕ່ຕິດຕາມເທົ່ານັ້ນ, ຕຶກປາເພື່ອໄດ້ຮັບພອນໃນນໍ້າທີ່ປັ່ນປ່ວນ; ພວກເຂົາບໍ່ໄດ້ສະແຫວງຫາຄວາມຈິງ ຫຼື ພວກເຂົາບໍ່ເຊື່ອຟັງພຣະເຈົ້າເພື່ອຮັບເອົາການອວຍພອນຂອງພຣະອົງຢ່າງແທ້ຈິງ. ຊີວິດແຫ່ງຄວາມເຊື່ອໃນພຣະເຈົ້າຂອງທຸກຄົນບໍ່ມີຄວາມໝາຍເລີຍ, ມັນປາສະຈາກຄຸນຄ່າ ແລະ ໃນນັ້ນກໍມີແຕ່ຂໍ້ພິຈາລະນາ ແລະ ການສະແຫວງຫາສ່ວນຕົວ; ພວກເຂົາບໍ່ເຊື່ອໃນພຣະເຈົ້າເພື່ອຮັກພຣະເຈົ້າ ແຕ່ເພື່ອເຫັນແກ່ການໄດ້ຮັບພອນ. ຫຼາຍຄົນປະຕິບັດຕົວຕາມທີ່ພວກເຂົາພໍໃຈ, ພວກເຂົາເຮັດໃນສິ່ງທີ່ພວກເຂົາຕ້ອງການ ແລະ ບໍ່ເຄີຍພິຈາລະນາເຖິງຜົນປະໂຫຍດຂອງພຣະເຈົ້າເລີຍ ຫຼື ສິ່ງທີ່ພວກເຂົາເຮັດນັ້ນສອດຄ່ອງກັບຄວາມປາຖະໜາຂອງພຣະເຈົ້າ ຫຼື ບໍ. ຄົນດັ່ງກ່າວຍິ່ງບໍ່ສາມາດບັນລຸຄວາມເຊື່ອທີ່ແທ້ຈິງຢ່າວ່າແຕ່ຄວາມຮັກທີ່ມີຕໍ່ພຣະເຈົ້າເລີຍ. ແກ່ນແທ້ຂອງພຣະເຈົ້າບໍ່ໄດ້ມີພຽງແຕ່ໃຫ້ມະນຸດເຊື່ອເທົ່ານັ້ນ, ຍິ່ງໄປກວ່ານັ້ນ ມັນເປັນສິ່ງທີ່ມີໃຫ້ມະນຸດຮັກ. ແຕ່ຫຼາຍຄົນທີ່ເຊື່ອໃນພຣະເຈົ້າບໍ່ສາມາດຄົ້ນພົບ "ຄວາມລັບ" ນີ້. ຜູ້ຄົນບໍ່ກ້າຮັກພຣະເຈົ້າ ຫຼື ພວກເຂົາບໍ່ພະຍາຍາມທີ່ຈະຮັກພຣະອົງ. ພວກເຂົາບໍ່ເຄີຍຄົ້ນພົບຈັກເທື່ອວ່າມີຫຼາຍສິ່ງທີ່ເປັນຕາຮັກກ່ຽວກັບພຣະເຈົ້າ, ພວກເຂົາບໍ່ເຄີຍຄົ້ນພົບຈັກເທື່ອວ່າພຣະເຈົ້າເປັນພຣະເຈົ້າທີ່ຮັກມະນຸດ ແລະ ພຣະອົງເປັນພຣະເຈົ້າທີ່ມີໃຫ້ມະນຸດຮັກ. ຄວາມເປັນຕາຮັກຂອງພຣະເຈົ້າຖືກສະແດງອອກໃນພາລະກິດຂອງພຣະອົງ ນັ້ນກໍຄື ມີພຽງແຕ່ ເມື່ອພວກເຂົາມີປະສົບການກັບພາລະກິດຂອງພຣະອົງ ຜູ້ຄົນຈຶ່ງສາມາດຄົ້ນພົບຄວາມເປັນຕາຮັກຂອງພຣະອົງໄດ້, ມີພຽງແຕ່ໃນປະສົບການຕາມຄວາມຈິງຂອງພວກເຂົາເທົ່ານັ້ນ ພວກເຂົາຈຶ່ງສາມາດເຂົ້າໃຈເຖິງຄວາມເປັນຕາຮັກຂອງພຣະເຈົ້າໄດ້ ແລະ ຫາກປາສະຈາກການເຝົ້າເບິ່ງໃນຊີວິດທີ່ເປັນຈິງ ບໍ່ມີໃຜສາມາດຄົ້ນພົບຄວາມເປັນຕາຮັກຂອງພຣະເຈົ້າໄດ້. ມີຫຼາຍສິ່ງທີ່ເປັນຕາຮັກກ່ຽວກັບພຣະເຈົ້າ ແຕ່ຫາກປາສະຈາກການມີສ່ວນຮ່ວມກັບພຣະເຈົ້າຢ່າງແທ້ຈິງ ຜູ້ຄົນບໍ່ສາມາດຄົ້ນພົບສິ່ງນັ້ນໄດ້. ນັ້ນໝາຍຄວາມວ່າ ຖ້າພຣະເຈົ້າບໍ່ກາຍມາເປັນມະນຸດ ຜູ້ຄົນກໍຈະບໍ່ສາມາດມີສ່ວນຮ່ວມກັບພຣະອົງຢ່າງແທ້ຈິງໄດ້ ແລະ ຖ້າພວກເຂົາບໍ່ສາມາດມີສ່ວນຮ່ວມກັບພຣະອົງຢ່າງແທ້ຈິງໄດ້ ພວກເຂົາກໍຈະບໍ່ສາມາດມີ

ປະສົບການກັບພາລະກິດຂອງພຣະອົງໄດ້ເຊັ່ນກັນ ແລະ ດ້ວຍເຫດນັ້ນ ຄວາມຮັກທີ່ພວກເຂົາມີຕໍ່ພຣະເຈົ້າກໍຈະເປິເປື້ອນໄປດ້ວຍຄວາມເຫັດ ແລະ ຈິນຕະນາການຫຼາຍຢ່າງ. ຄວາມຮັກຕໍ່ພຣະເຈົ້າທີ່ຢູ່ເທິງສະຫວັນບໍ່ເປັນຈິງເທົ່າຄວາມຮັກຕໍ່ພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກ, ຍ້ອນຄວາມຮູ້ຂອງຜູ້ຄົນກ່ຽວກັບພຣະເຈົ້າທີ່ຢູ່ໃນສະຫວັນແມ່ນສ້າງຂຶ້ນຈາກຈິນຕະນາການຂອງພວກເຂົາ ແທນທີ່ຈະສ້າງຂຶ້ນຈາກສິ່ງພວກເຂົາເຫັນດ້ວຍຕາຂອງຕົນເອງ ແລະ ສິ່ງທີ່ພວກເຂົາມີປະສົບການດ້ວຍຕົວເອງ. ເມື່ອພຣະເຈົ້າລົງມາເທິງແຜ່ນດິນໂລກ, ຜູ້ຄົນສາມາດເຫັນການກະທຳຢ່າງແທ້ຈິງຂອງພຣະອົງ ແລະ ຄວາມເປັນຕາຮັກຂອງພຣະອົງ ແລະ ພວກເຂົາສາມາດເຫັນທຸກສິ່ງທີ່ມາຈາກອຸປະນິໄສຈິງ ແລະ ປົກກະຕິຂອງພຣະອົງ, ເຊິ່ງທຸກສິ່ງແມ່ນມີຄວາມເປັນຈິງຫຼາຍກວ່າຄວາມຮູ້ກ່ຽວກັບພຣະເຈົ້າໃນສະຫວັນເປັນພັນໆເທົ່າ. ບໍ່ວ່າມະນຸດຈະຮັກພຣະເຈົ້າທີ່ຢູ່ໃນສະຫວັນຫຼາຍສໍ່າໃດ ກໍບໍ່ມີຄວາມຈິງກ່ຽວກັບຄວາມຮັກນີ້ ແລະ ມັນເຕັມໄປດ້ວຍແນວຄິດຂອງມະນຸດ. ບໍ່ວ່າຄວາມຮັກທີ່ພວກເຂົາມີຕໍ່ພຣະເຈົ້າເທິງແຜ່ນດິນໂລກນັ້ນມີໜ້ອຍສໍ່າໃດ ຄວາມຮັກນີ້ແມ່ນເປັນຈິງ; ເຖິງແມ່ນຈະມີພຽງເລັກນ້ອຍ ແຕ່ມັນກໍຍັງເປັນຈິງ. ພຣະເຈົ້າເຮັດໃຫ້ຜູ້ຄົນຮູ້ຈັກພຣະອົງຜ່ານພາລະກິດທີ່ແທ້ຈິງຂອງພຣະອົງ ແລະ ຜ່ານຄວາມຮູ້ນີ້ ພຣະອົງໄດ້ຮັບຄວາມຮັກຈາກພວກເຂົາ. ຄືກັບເປໂຕ ຖ້າເພິ່ນບໍ່ດຳລົງຊີວິດກັບພຣະເຢຊູ, ມັນກໍຈະເປັນໄປບໍ່ໄດ້ທີ່ເພິ່ນຈະເຄົາລົບພຣະເຢຊູ. ສະນັ້ນ ຄວາມຊື່ສັດທີ່ເພິ່ນມີຕໍ່ພຣະເຢຊູແມ່ນຖືກສ້າງຂຶ້ນບົນຄວາມມີສ່ວນຮ່ວມກັບພຣະເຢຊູເຊັ່ນດຽວກັນ. ເພື່ອເຮັດໃຫ້ມະນຸດຮັກພຣະອົງ ພຣະເຈົ້າໄດ້ລົງມາທ່າມກາງມະນຸດ ແລະ ດຳລົງຊີວິດຮ່ວມກັບມະນຸດ ແລະ ທຸກສິ່ງທີ່ພຣະອົງເຮັດໃຫ້ມະນຸດເຫັນ ແລະ ສຳຜັດ ແມ່ນຄວາມເປັນຈິງຂອງພຣະເຈົ້າ.

ພຣະເຈົ້ານຳໃຊ້ຄວາມເປັນຈິງ ແລະ ການມາເຖິງຂອງຄວາມຈິງເພື່ອເຮັດໃຫ້ຜູ້ຄົນສົມບູນ; ພຣະທຳຂອງພຣະເຈົ້າສຳເລັດສ່ວນໜຶ່ງຂອງການເຮັດໃຫ້ຜູ້ຄົນສົມບູນ ແລະ ນີ້ແມ່ນພາລະກິດແຫ່ງການນຳພາ ແລະ ການເປີດທົນທາງ. ໝາຍຄວາມວ່າ ໃນພຣະທຳຂອງພຣະເຈົ້າ ເຈົ້າຕ້ອງພົບເສັ້ນທາງສູ່ການປະຕິບັດ ແລະ ຄວາມຮູ້ກ່ຽວກັບນິມິດ. ໂດຍການເຂົ້າໃຈສິ່ງເຫຼົ່ານີ້ ມະນຸດຈະມີເສັ້ນທາງ ແລະ ນິມິດໃນການປະຕິບັດຕົວຈິງຂອງເຂົາ ແລະ ເຂົາຈະສາມາດໄດ້ຮັບແສງສະຫວ່າງຜ່ານພຣະທຳຂອງພຣະເຈົ້າ, ເຂົາຈະສາມາດເຂົ້າໃຈວ່າ ສິ່ງເຫຼົ່ານີ້ແມ່ນມາຈາກພຣະເຈົ້າ ແລະ ສາມາດສັງເກດເຫັນຫຼາຍສິ່ງຫຼາຍຢ່າງ. ຫຼັງຈາກການເຂົ້າໃຈແລ້ວ ມະນຸດຕ້ອງເຂົ້າສູ່ຄວາມເປັນຈິງນີ້ທັນທີ ແລະ ຕ້ອງນຳໃຊ້ພຣະທຳຂອງພຣະເຈົ້າເພື່ອເຮັດໃຫ້ພຣະເຈົ້າພໍໃຈໃນຊີວິດຄວາມເປັນຈິງຂອງເຂົາ. ພຣະເຈົ້າຈະນຳພາເຈົ້າທຸກສິ່ງ ແລະ ຈະມອບເສັ້ນທາງສູ່ການປະຕິບັດໃຫ້ກັບພວກເຈົ້າ ແລະ ເຮັດໃຫ້ພວກເຈົ້າຮູ້ສຶກວ່າພຣະອົງເປັນຕາຮັກໂດຍພິເສດ ແລະ ເຮັດໃຫ້ພວກເຈົ້າເຫັນວ່າ ທຸກບາດກ້າວໃນການດຳເນີນພາລະກິດຂອງພຣະເຈົ້າແມ່ນເພື່ອຕັ້ງໃຈເຮັດໃຫ້ພວກເຈົ້າສົມບູນ. ຖ້າພວກເຈົ້າປາຖະໜາທີ່ຈະເຫັນຄວາມຮັກຂອງພຣະເຈົ້າ ຖ້າເຈົ້າປາຖະໜາທີ່ຈະມີປະສົບການກັບຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງແລ້ວພວກເຈົ້າກໍຕ້ອງລົງເລິກສູ່ຄວາມເປັນຈິງ, ເຈົ້າຕ້ອງລົງເລິກສູ່ຊີວິດທີ່ແທ້ຈິງ ແລະ ເຫັນວ່າທຸກສິ່ງທີ່ພຣະອົງປະຕິບັດນັ້ນແມ່ນຄວາມຮັກ ແລະ ຄວາມລອດພົ້ນ ເຊິ່ງທຸກສິ່ງທີ່ພຣະອົງກະທຳແມ່ນເພື່ອ

ເຮັດໃຫ້ຜູ້ຄົນປະຖິ້ມສິ່ງທີ່ບໍ່ເປັນມົນທິນ ແລະ ເພື່ອຫຼໍ່ຫຼອມສິ່ງທີ່ຢູ່ພາຍໃນມະນຸດທີ່ບໍ່ສາມາດເປັນທີ່ພໍໃຈຕາມຄວາມປາຖະໜາຂອງພຣະເຈົ້າໄດ້. ພຣະເຈົ້ານຳໃຊ້ພຣະທຳເພື່ອຈັດກຽມໃຫ້ກັບມະນຸດ; ພຣະອົງສ້າງສະພາບແວດລ້ອມໃນຊີວິດທີ່ເປັນຈິງເພື່ອຜູ້ຄົນໄດ້ມີປະສົບການ ແລະ ຖ້າຜູ້ຄົນກິນ ແລະ ດື່ມພຣະທຳຂອງພຣະເຈົ້າຫຼາຍຂໍ້ ແລ້ວເມື່ອພວກເຂົາໄດ້ນຳພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດຕົວຈິງ, ພວກເຂົາສາມາດແກ້ໄຂອຸປະສັກທຸກຢ່າງທີ່ຢູ່ໃນຊີວິດຂອງພວກເຂົາໄດ້ ໂດຍໃຊ້ພຣະທຳຫຼາຍຂໍ້ຂອງພຣະເຈົ້າ. ໝາຍຄວາມວ່າ ເຈົ້າຕ້ອງມີພຣະທຳຂອງພຣະເຈົ້າເພື່ອທີ່ຈະລົງເລິກສູ່ຄວາມເປັນຈິງ; ຖ້າເຈົ້າບໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ປາສະຈາກພາລະກິດຂອງພຣະເຈົ້າ ແລ້ວເຈົ້າກໍຈະບໍ່ມີເສັ້ນທາງໃນຊີວິດທີ່ແທ້ຈິງ. ຖ້າເຈົ້າບໍ່ເຄີຍກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າກໍຈະສັບສົນເມື່ອມີບາງສິ່ງເກີດຂຶ້ນກັບເຈົ້າ. ເຈົ້າພຽງແຕ່ຮູ້ຈັກວ່າ ເຈົ້າຄວນຮັກພຣະເຈົ້າ ແຕ່ເຈົ້າບໍ່ສາມາດຈຳແນກຄວາມແຕກຕ່າງຫຍັງເລີຍ ແລະ ບໍ່ມີເສັ້ນທາງສູ່ການປະຕິບັດ; ເຈົ້າສັບສົນ ແລະ ວຸ້ນວາຍ ແລະ ບາງເທື່ອ ເຈົ້າຍິ່ງເຊື່ອວ່າ ການເຮັດໃຫ້ເນື້ອໜັງພໍໃຈນັ້ນ ເຈົ້າກຳລັງເຮັດໃຫ້ພຣະເຈົ້າພໍໃຈ, ທຸກສິ່ງນີ້ຄືຜົນຕາມມາຂອງການບໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ. ໝາຍຄວາມວ່າ ຖ້າເຈົ້າປາສະຈາກຄວາມຊ່ວຍເຫຼືອຈາກພຣະທຳຂອງພຣະເຈົ້າ ແລະ ງົມຫາພາຍໃນຄວາມເປັນຈິງ ແລ້ວເຈົ້າກໍບໍ່ສາມາດພົບເສັ້ນທາງສູ່ການປະຕິບັດຢ່າງແທ້ຈິງ. ຜູ້ຄົນປະເພດນີ້ບໍ່ເຂົ້າໃຈວ່າ ການເຊື່ອໃນພຣະເຈົ້າໝາຍຄວາມວ່າຫຍັງກັນແທ້ ຢ່າວ່າແຕ່ພວກເຂົາເຂົ້າໃຈວ່າ ການຮັກພຣະເຈົ້າໝາຍຄວາມວ່າຫຍັງເລີຍ. ຖ້າເຈົ້າອະທິຖານ, ຄົ້ນຫາ ແລະ ສະແຫວງຫາເລື້ອຍໆໂດຍນຳໃຊ້ແສງສະຫວ່າງ ແລະ ການນຳພາແຫ່ງພຣະທຳຂອງພຣະເຈົ້າ ແລະ ຜ່ານສິ່ງນີ້ ເຈົ້າຄົ້ນພົບວ່າ ເຈົ້າຄວນນຳເຂົ້າສູ່ການປະຕິບັດຕົວຈິງ, ຊອກຫາໂອກາດສຳລັບພາລະກິດຂອງພຣະວິນຍານບໍລິສຸດ, ຮ່ວມມືກັບພຣະເຈົ້າຢ່າງແທ້ຈິງ ແລະ ບໍ່ສັບສົນ ແລະ ວຸ້ນວາຍ, ແລ້ວເຈົ້າກໍຈະມີເສັ້ນທາງໃນຊີວິດ ແລະ ຈະເຮັດໃຫ້ພຣະເຈົ້າພໍໃຈຢ່າງແທ້ຈິງ. ເມື່ອເຈົ້າເຮັດໃຫ້ພຣະເຈົ້າພໍໃຈ ກໍຈະເກີດມີການນຳພາຂອງພຣະເຈົ້າພາຍໃນຕົວເຈົ້າ ແລະ ເຈົ້າຈະໄດ້ຮັບການອວຍພອນເປັນພິເສດຈາກພຣະເຈົ້າ ເຊິ່ງຈະເຮັດໃຫ້ເຈົ້າຮູ້ສຶກມີຄວາມສຸກ ນັ້ນກໍຄື ເຈົ້າຈະຮູ້ສຶກມີກຽດເປັນພິເສດທີ່ເຈົ້າເຮັດໃຫ້ພຣະເຈົ້າພໍໃຈ, ເຈົ້າຈະຮູ້ສຶກເບີກບານຢູ່ພາຍໃນ ແລະ ໃນຫົວໃຈຂອງເຈົ້າ ເຈົ້າຈະຊັດເຈນ ແລະ ສະຫງົບສຸກ. ຄວາມສຳນຶກຂອງເຈົ້າຈະໄດ້ຮັບການປອບໃຈ ແລະ ປາສະຈາກຄຳກ່າວຫາໃດໆ ແລະ ເຈົ້າຈະຮູ້ສຶກສະບາຍໃຈໃນຂ້າງໃນເມື່ອເວລາທີ່ເຈົ້າເຫັນອ້າຍເອື້ອຍນ້ອງຂອງເຈົ້າ. ນີ້ຄືຄວາມໝາຍຂອງການຮັບຄວາມຮັກຈາກພຣະເຈົ້າ ແລະ ມີພຽງແຕ່ສິ່ງນີ້ເທົ່ານັ້ນຄືການຮັບພຣະເຈົ້າຢ່າງແທ້ຈິງ. ຜູ້ຄົນທີ່ຮັບເອົາຄວາມຮັກຂອງພຣະເຈົ້າແມ່ນໄດ້ຮັບຜ່ານປະສົບການນັ້ນກໍຄື ໄດ້ຜະເຊີນກັບຄວາມລຳບາກ ແລະ ມີປະສົບການກັບການນຳຄວາມຈິງເຂົ້າສູ່ການປະຕິບັດ, ພວກເຂົາຈຶ່ງໄດ້ຮັບການອວຍພອນຈາກພຣະເຈົ້າ. ຖ້າເຈົ້າພຽງແຕ່ກ່າວວ່າ ພຣະເຈົ້າຮັກເຈົ້າຢ່າງແທ້ຈິງ, ພຣະເຈົ້າໄດ້ຈ່າຍດ້ວຍລາຄາທີ່ໃຫຍ່ຫຼວງຢ່າງແທ້ຈິງເພື່ອຜົນປະໂຫຍດຂອງຜູ້ຄົນ, ພຣະອົງໄດ້ກ່າວພຣະທຳຫຼາຍຂໍ້ຢ່າງອົດທົນ ແລະ ຈິງໃຈ ແລະ ຊ່ວຍຜູ້ຄົນໃຫ້ລອດພົ້ນຢູ່ສະເໝີ, ການທີ່ເຈົ້າເວົ້າເຖິງພຣະທຳເຫຼົ່ານີ້ກໍເປັນພຽງດ້ານໜຶ່ງໃນການຮັບເອົາພຣະເຈົ້າ. ແຕ່ການຮັບທີ່ຍິ່ງໃຫຍ່ກວ່ານັ້ນ ນັ້ນກໍຄື

ການຮັບທີ່ແທ້ຈິງແມ່ນເມື່ອຜູ້ຄົນນຳຄວາມຈິງເຂົ້າສູ່ການປະຕິບັດໃນຊີວິດຈິງຂອງພວກເຂົາ, ຫຼັງຈາກນັ້ນ ພວກເຂົາແມ່ນສະຫງົບສຸກ ແລະ ຊັດເຈນໃນຫົວໃຈຂອງພວກເຂົາ. ພວກເຂົາຮູ້ສຶກຊື່ນຊົມຢ່າງໃຫຍ່ຫຼວງ ແລະ ຮູ້ສຶກວ່າ ພຣະເຈົ້າເປັນຕາຮັກທີ່ສຸດ. ເຈົ້າຈະຮູ້ສຶກວ່າລາຄາທີ່ເຈົ້າໄດ້ຈ່າຍນັ້ນຍຸຕິທຳຫຼາຍ. ເມື່ອໄດ້ອົດທົນຢ່າງໃຫຍ່ຫຼວງໃນຄວາມພະຍາຍາມຂອງເຈົ້າ ເຈົ້າຈະເບີກບານເປັນພິເສດໃນຂ້າງໃນ ນັ້ນກໍຄື ເຈົ້າຈະຮູ້ສຶກວ່າ ເຈົ້າກຳລັງໄດ້ຮັບຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ ແລະ ເຈົ້າຈະເຂົ້າໃຈວ່າ ພຣະເຈົ້າໄດ້ປະຕິບັດພາລະກິດແຫ່ງຄວາມລອດພົ້ນໃນຜູ້ຄົນ, ການຫຼໍ່ຫຼອມຜູ້ຄົນຂອງພຣະເຈົ້າແມ່ນເພື່ອເຮັດໃຫ້ພວກເຂົາບໍລິສຸດ ແລະ ພຣະເຈົ້າທົດລອງຜູ້ຄົນເພື່ອທົດສອບວ່າ ພວກເຂົາຮັກພຣະອົງຢ່າງແທ້ຈິງ ຫຼື ບໍ່. ຖ້າເຈົ້ານຳຄວາມຈິງເຂົ້າສູ່ການປະຕິບັດຢ່າງເປັນປະຈຳ ແລ້ວເຈົ້າກໍຈະພັດທະນາຄວາມຮູ້ທີ່ຊັດເຈນເທື່ອລະໜ້ອຍກ່ຽວກັບພາລະກິດສ່ວນຫຼາຍຂອງພຣະເຈົ້າ ແລະ ໃນເວລານັ້ນ ເຈົ້າຈະຮູ້ສຶກວ່າ ພຣະທຳຂອງພຣະເຈົ້າທີ່ຢູ່ຕໍ່ໜ້າເຈົ້າໃສຄືກັບແກ້ວຜະລຶກ. ຖ້າເຈົ້າສາມາດເຂົ້າໃຈຄວາມຈິງຫຼາຍຢ່າງທີ່ຊັດເຈນ ເຈົ້າຈະຮູ້ສຶກວ່າ ບັນຫາທຸກຢ່າງແມ່ນງ່າຍທີ່ຈະນຳເຂົ້າສູ່ການປະຕິບັດ, ເຈົ້າສາມາດເອົາຊະນະທຸກບັນຫາໄດ້ ແລະ ເອົາຊະນະການທົດລອງໃດໆກໍໄດ້ ແລະ ເຈົ້າຈະບໍ່ເຫັນຫຍັງເປັນບັນຫາສຳລັບເຈົ້າເລີຍ ເຊິ່ງຈະເຮັດໃຫ້ເຈົ້າຮູ້ສຶກຢ່າງຍິ່ງວ່າເປັນອິດສະຫຼະ ແລະ ເຈົ້າຖືກປົດປ່ອຍ. ໃນຊ່ວງເວລານີ້ ເຈົ້າຈະຮັບຄວາມຮັກຂອງພຣະເຈົ້າ ແລະ ຄວາມຮັກທີ່ແທ້ຈິງຂອງພຣະເຈົ້າກໍຈະມາຫາເຈົ້າ. ພຣະເຈົ້າອວຍພອນຄົນທີ່ມີນິມິດ, ຄົນທີ່ມີຄວາມຈິງ, ຄົນທີ່ມີຄວາມຮູ້ ແລະ ຄົນທີ່ຮັກພຣະອົງຢ່າງແທ້ຈິງ. ຖ້າຜູ້ຄົນປາຖະໜາທີ່ຈະເຫັນຄວາມຮັກຂອງພຣະເຈົ້າ, ພວກເຂົາຕ້ອງນຳຄວາມຈິງເຂົ້າສູ່ການປະຕິບັດໃນຊີວິດທີ່ແທ້ຈິງ, ພວກເຂົາຕ້ອງເຕັມໃຈທີ່ຈະອົດທົນຕໍ່ຄວາມເຈັບປວດ ແລະ ປະຖິ້ມສິ່ງທີ່ພວກເຂົາຮັກເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ເຖິງແມ່ນວ່າຈະມີນໍ້າຕາໃນດວງຕາຂອງພວກເຂົາ ພວກເຂົາຍັງຕ້ອງສາມາດເປັນທີ່ພໍໃຈໃນຫົວໃຈຂອງພຣະເຈົ້າໄດ້. ດ້ວຍວິທີນີ້ ພຣະເຈົ້າຈະອວຍພອນເຈົ້າຢ່າງແນ່ນອນ ແລະ ຖ້າເຈົ້າອົດທົນຕໍ່ຄວາມລຳບາກແບບນີ້, ພາລະກິດຂອງພຣະວິນຍານບໍລິສຸດກໍຈະຕາມມາ. ຜ່ານຊີວິດທີ່ແທ້ຈິງ ແລະ ຜ່ານການມີປະສົບການກັບພຣະທຳຂອງພຣະເຈົ້າ, ຜູ້ຄົນສາມາດເຫັນຄວາມເປັນຕາຮັກຂອງພຣະເຈົ້າ ແລະ ພຽງແຕ່ເມື່ອພວກເຂົາໄດ້ຊີມລົດຊາດແຫ່ງຄວາມຮັກຂອງພຣະເຈົ້າ ພວກເຂົາຈຶ່ງຈະຮັກພຣະອົງຢ່າງແທ້ຈິງ.

ຄົນທີ່ຮັກພຣະເຈົ້າຄືຄົນທີ່ຮັກຄວາມຈິງ ແລະ ຍິ່ງຄົນທີ່ຮັກຄວາມຈິງນຳຄວາມຈິງໄປປະຕິບັດຫຼາຍສໍ່າໃດ, ພວກເຂົາກໍຈະມີຄວາມຈິງຫຼາຍສໍ່ານັ້ນ; ຍິ່ງພວກເຂົານຳມັນໄປປະຕິບັດຫຼາຍສໍ່າໃດ, ພວກເຂົາກໍຈະມີຄວາມຮັກຂອງພຣະເຈົ້າຫຼາຍສໍ່ານັ້ນ; ແລະ ຍິ່ງພວກເຂົານຳມັນໄປປະຕິບັດຫຼາຍສໍ່າໃດ, ພວກເຂົາກໍຈະຖືກພຣະເຈົ້າອວຍພອນຫຼາຍສໍ່ານັ້ນ. ຖ້າເຈົ້າປະຕິບັດໃນວິທີທາງນີ້ຢູ່ສະເໝີ ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ເຈົ້າຈະສາມາດເຮັດໃຫ້ເຈົ້າເຫັນເທື່ອລະໜ້ອຍ ຄືກັບທີ່ເປໂຕໄດ້ມາຮູ້ຈັກພຣະເຈົ້າ: ເຊິ່ງເປໂຕໄດ້ກ່າວວ່າ ພຣະເຈົ້າບໍ່ພຽງແຕ່ມີສະຕິປັນຍາໃນການສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງເທົ່ານັ້ນ, ແຕ່ຍິ່ງໄປກວ່ານັ້ນ ພຣະອົງມີສະຕິປັນຍາໃນການປະຕິບັດພາລະກິດທີ່ແທ້ຈິງໃນຜູ້ຄົນ. ເປໂຕກ່າວອີກວ່າ ພຣະອົງບໍ່ພຽງແຕ່ສົມຄວນແກ່ຄວາມຮັກຂອງ

ຜູ້ຄົນ ຍ້ອນພຣະອົງສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງເທົ່ານັ້ນ, ແຕ່ຍິ່ງໄປກວ່ານັ້ນ ຍ້ອນຄວາມສາມາດຂອງພຣະອົງທີ່ສ້າງມະນຸດ, ຊ່ວຍມະນຸດ, ເຮັດໃຫ້ມະນຸດສົມບູນ ແລະ ມອບຄວາມຮັກຂອງພຣະອົງໃຫ້ເປັນຊັບສົມບັດຂອງມະນຸດ. ດ້ວຍເຫດນັ້ນ ເປໂຕຍັງໄດ້ກ່າວຕື່ມວ່າ ມີຫຼາຍສິ່ງຫຼາຍຢ່າງໃນພຣະອົງທີ່ສົມຄວນແກ່ຄວາມຮັກຂອງມະນຸດເຊັ່ນກັນ. ເປໂຕເວົ້າກັບພຣະເຢຊູວ່າ “ການສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງຄືເຫດຜົນດຽວທີ່ພຣະອົງສົມຄວນໄດ້ຮັບຄວາມຮັກຂອງຜູ້ຄົນບໍ? ມີຫຼາຍສິ່ງໃນພຣະອົງທີ່ສົມຄວນແກ່ຄວາມຮັກ, ພຣະອົງກະທຳ ແລະ ເຄື່ອນໄຫວໃນຊີວິດທີ່ແທ້ຈິງ, ວິນຍານຂອງພຣະອົງສຳຜັດຂ້ານ້ອຍຢູ່ຂ້າງໃນ, ພຣະອົງລົງວິໄນຂ້ານ້ອຍ, ພຣະອົງຕຳນິຕິເຕືອນຂ້ານ້ອຍ, ສິ່ງເຫຼົ່ານີ້ຍິ່ງສົມຄວນແກ່ຄວາມຮັກຂອງຜູ້ຄົນ”. ຖ້າເຈົ້າປາຖະໜາທີ່ຈະເຫັນ ແລະ ຜະເຊີນຄວາມຮັກຂອງພຣະເຈົ້າ ແລ້ວເຈົ້າຕ້ອງຄົ້ນຫາ ແລະ ສະແຫວງຫາໃນຊີວິດທີ່ແທ້ຈິງ ແລະ ຕ້ອງເຕັມໃຈທີ່ຈະປະຖິ້ມເນື້ອໜັງຂອງເຈົ້າເອງ. ເຈົ້າຕ້ອງຕັດສິນໃຈແບບນີ້. ເຈົ້າຕ້ອງເປັນຄົນທີ່ມີຄວາມເດັດດ່ຽວ ເຊິ່ງເປັນຄົນທີ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໃນທຸກສິ່ງທຸກຢ່າງ ໂດຍບໍ່ຂີ້ຄ້ານ ຫຼື ອິດສາຢາກໄດ້ຄວາມສຸກທາງເນື້ອໜັງ, ບໍ່ແມ່ນການມີຊີວິດຢູ່ເພື່ອເນື້ອໜັງ ແຕ່ມີຊີວິດຢູ່ເພື່ອພຣະເຈົ້າ. ມີຫຼາຍຄັ້ງທີ່ເຈົ້າເຮັດໃຫ້ພຣະເຈົ້າບໍ່ພໍໃຈ. ນັ້ນກໍຍ້ອນວ່າ ເຈົ້າບໍ່ເຂົ້າໃຈຄວາມປາຖະໜາຂອງພຣະເຈົ້າ; ສຳລັບຄັ້ງຕໍ່ໄປ ເຖິງແມ່ນມັນຈະໃຊ້ຄວາມພະຍາຍາມຫຼາຍຂຶ້ນ, ເຈົ້າກໍຕ້ອງເຮັດໃຫ້ພຣະອົງພໍໃຈ ແລະ ຕ້ອງບໍ່ເປັນທີ່ພໍໃຈຂອງເນື້ອໜັງ. ເມື່ອເຈົ້າມີປະສົບການໃນວິທີນີ້ ເຈົ້າຈະຮຽນຮູ້ຈັກພຣະເຈົ້າ. ເຈົ້າຈະເຫັນວ່າ ພຣະເຈົ້າສາມາດສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງ, ພຣະອົງໄດ້ກາຍມາເປັນເນື້ອໜັງເພື່ອຜູ້ຄົນຈະສາມາດເຫັນພຣະອົງຢ່າງແທ້ຈິງ ແລະ ມີສ່ວນຮ່ວມກັບພຣະອົງຢ່າງແທ້ຈິງ; ເຈົ້າຈະເຫັນວ່າ ພຣະອົງສາມາດຍ່າງທ່າມກາງມະນຸດໄດ້ ແລະ ພຣະວິນຍານຂອງພຣະອົງສາມາດເຮັດໃຫ້ຜູ້ຄົນສົມບູນໃນຊີວິດທີ່ແທ້ຈິງ ໂດຍເຮັດໃຫ້ພວກເຂົາເຫັນຄວາມເປັນຕາຮັກ ແລະ ມີປະສົບການກັບການລົງວິໄນຂອງພຣະອົງ, ການຕີສອນຂອງພຣະອົງ ແລະ ການອວຍພອນຂອງພຣະອົງ. ຖ້າເຈົ້າມີປະສົບການໃນວິທີນີ້ຢູ່ສະເໝີ ເຈົ້າຈະບໍ່ສາມາດແຍກອອກຈາກພຣະເຈົ້າໃນຊີວິດທີ່ແທ້ຈິງໄດ້ ແລະ ຖ້າມື້ໜຶ່ງ ຄວາມສຳພັນຂອງເຈົ້າກັບພຣະເຈົ້າເຊົາຈາກປົກກະຕິ ເຈົ້າກໍຈະໄດ້ຮັບການຕຳນິຕິເຕືອນ ແລະ ຮູ້ສຶກເຖິງຄວາມສຳນຶກຜິດ. ເມື່ອເຈົ້າມີຄວາມສຳພັນທີ່ປົກກະຕິກັບພຣະເຈົ້າ ເຈົ້າຈະບໍ່ປາຖະໜາທີ່ຈະອອກຈາກພຣະອົງຈັກເທື່ອ ແລະ ຖ້າມື້ໜຶ່ງ ພຣະເຈົ້າເວົ້າວ່າ ພຣະອົງຈະປະຖິ້ມເຈົ້າ, ເຈົ້າຈະຢ້ານກົວ ແລະ ຈະເວົ້າວ່າ ເຈົ້າຈະຕາຍດີກວ່າທີ່ຈະຖືກພຣະເຈົ້າປະຖິ້ມ. ທັນທີທີ່ເຈົ້າມີອາລົມເຫຼົ່ານີ ເຈົ້າຈະຮູ້ສຶກວ່າ ເຈົ້າບໍ່ສາມາດອອກຈາກພຣະເຈົ້າໄດ້ ແລະ ດ້ວຍວິທີທາງນີ້ ເຈົ້າຈະມີພື້ນຖານ ແລະ ຈະຮັບຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ.

ຜູ້ຄົນມັກເວົ້າເຖິງການໃຫ້ພຣະເຈົ້າເປັນຊີວິດຂອງພວກເຂົາ ແຕ່ປະສົບການຂອງພວກເຂົາຍັງບໍ່ໄດ້ມາເຖິງຈຸດນັ້ນເທື່ອ. ເຈົ້າພຽງແຕ່ເວົ້າວ່າ ພຣະເຈົ້າເປັນຊີວິດຂອງເຈົ້າ, ພຣະອົງນຳພາເຈົ້າໃນແຕ່ລະມື້, ເຈົ້າກິນ ແລະ ດື່ມພຣະທຳຂອງພຣະອົງໃນແຕ່ລະມື້ ແລະ ເຈົ້າອະທິຖານຫາພຣະເຈົ້າໃນແຕ່ລະມື້, ດ້ວຍເຫດນັ້ນ ພຣະອົງໄດ້ກາຍມາເປັນຊີວິດຂອງເຈົ້າແລ້ວ. ຄວາມຮູ້ຂອງຄົນທີ່ເວົ້າສິ່ງນີ້ແມ່ນຕື້ນ

ພໍສົມຄວນ. ຫຼາຍຄົນແມ່ນບໍ່ມີພື້ນຖານ; ພຣະທຳຂອງພຣະເຈົ້າຖືກປູກຝັງພາຍໃນພວກເຂົາ ແຕ່ພວກເຂົາຍັງບໍ່ທັນແຕກໜໍ່ເທື່ອ ຢ່າວ່າແຕ່ພວກເຂົາຈະເກີດໝາກຜົນເລີຍ. ໃນປັດຈຸບັນ ເຈົ້າໄດ້ມີປະສົບການຮອດຂັ້ນໃດແລ້ວ? ມີພຽງແຕ່ໃນປັດຈຸບັນນີ້ ຫຼັງຈາກທີ່ພຣະອົງໄດ້ບັງຄັບໃຫ້ເຈົ້າມາໄກສໍ່ານີ້ ເຈົ້າຈຶ່ງຮູ້ສຶກວ່າ ເຈົ້າບໍ່ສາມາດອອກຈາກພຣະເຈົ້າໄດ້. ມື້ໜຶ່ງ ເມື່ອປະສົບການຂອງເຈົ້າໄດ້ໄປເຖິງໃນລະດັບໃດໜຶ່ງ ຖ້າພຣະເຈົ້າຕ້ອງເຮັດໃຫ້ເຈົ້າອອກຈາກພຣະອົງ ເຈົ້າກໍຈະບໍ່ສາມາດເຮັດໄດ້. ເຈົ້າຈະຮູ້ສຶກຢູ່ສະເໝີວ່າ ເຈົ້າບໍ່ສາມາດມີຊີວິດຢູ່ຫາກປາສະຈາກພຣະເຈົ້າຢູ່ຂ້າງໃນເຈົ້າ; ເຈົ້າສາມາດມີຊີວິດໂດຍປາສະຈາກສາມີ, ພັນລະຍາ ຫຼື ລູກໆ ຫຼື ປາສະຈາກຄອບຄົວ, ປາສະຈາກມານດາ ຫຼື ບິດາ, ປາສະຈາກຄວາມສຸກທາງເນື້ອໜັງ ແຕ່ເຈົ້າບໍ່ສາມາດມີຊີວິດໂດຍປາສະຈາກພຣະເຈົ້າໄດ້. ການປາສະຈາກພຣະເຈົ້າກໍຈະເປັນຄືກັບການສູນເສຍຊີວິດຂອງເຈົ້າ, ເຈົ້າຈະບໍ່ສາມາດມີຊີວິດຢູ່ ຫາກປາສະຈາກພຣະເຈົ້າ. ເມື່ອເຈົ້າໄດ້ມີປະສົບການຈົນຮອດຈຸດນີ້ແລ້ວ ເຈົ້າກໍຈະສຳເລັດໃນຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າ ແລະ ດ້ວຍວິທີນີ້ ພຣະເຈົ້າກໍຈະກາຍມາເປັນຊີວິດຂອງເຈົ້າ, ພຣະອົງຈະກາຍມາເປັນພື້ນຖານຂອງການເປັນຢູ່ຂອງເຈົ້າ. ເຈົ້າຈະບໍ່ສາມາດອອກຈາກພຣະເຈົ້າໄດ້ອີກຈັກເທື່ອ. ເມື່ອເຈົ້າມີປະສົບການຈົນຮອດຂັ້ນນີ້ ເຈົ້າຈະໄດ້ຮັບຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ ແລະ ເມື່ອເຈົ້າມີຄວາມສຳພັນກັບພຣະເຈົ້າຢ່າງໃກ້ຊິດ, ພຣະອົງຈະເປັນຊີວິດຂອງເຈົ້າ, ຄວາມຮັກຂອງເຈົ້າ ແລະ ໃນເວລານັ້ນເຈົ້າຈະອະທິຖານຫາພຣະເຈົ້າ ແລະ ເວົ້າວ່າ “ໂອ ພຣະເຈົ້າ! ຂ້ານ້ອຍບໍ່ສາມາດອອກຈາກພຣະອົງໄດ້. ພຣະອົງຄືຊີວິດຂອງຂ້ານ້ອຍ, ຂ້ານ້ອຍສາມາດໄປໂດຍປາສະຈາກສິ່ງອື່ນ ແຕ່ຫາກປາສະຈາກພຣະອົງຂ້ານ້ອຍບໍ່ສາມາດມີຊີວິດຢູ່ຕໍ່ໄປໄດ້”. ນີ້ຄືວຸດທິພາວະທີ່ແທ້ຈິງຂອງຜູ້ຄົນ; ມັນຄືຊີວິດທີ່ແທ້ຈິງ. ບາງຄົນຖືກບັງຄັບໃຫ້ມາໄກຈົນຮອດບ່ອນທີ່ພວກເຂົາຢູ່ໃນປັດຈຸບັນ ນັ້ນກໍຄື ພວກເຂົາຕ້ອງຍ່າງໄປຂ້າງໜ້າບໍ່ວ່າພວກເຂົາຕ້ອງການ ຫຼື ບໍ ແລະ ພວກເຂົາຮູ້ສຶກຄືກັບວ່າ ພວກເຂົາຕິດຢູ່ໃນສະພາບທີ່ກືນບໍ່ເຂົ້າຄາຍບໍ່ອອກ. ເຈົ້າຕ້ອງມີປະສົບການໃນສິ່ງດັ່ງກ່າວທີ່ວ່າ ພຣະເຈົ້າເປັນຊີວິດຂອງເຈົ້າ, ໃນສິ່ງດັ່ງກ່າວທີ່ວ່າ ຖ້າພຣະເຈົ້າຖືກນຳອອກໄປຈາກຫົວໃຈຂອງເຈົ້າ ມັນກໍຈະເປັນຄືກັບການສູນເສຍຊີວິດຂອງເຈົ້າ; ພຣະເຈົ້າຕ້ອງເປັນຊີວິດຂອງເຈົ້າ ແລະ ເຈົ້າຕ້ອງບໍ່ສາມາດອອກຈາກພຣະອົງໄດ້. ດ້ວຍວິທີນີ້ ເຈົ້າຈະມີປະສົບການກັບພຣະເຈົ້າຢ່າງແທ້ຈິງ ແລະ ໃນເວລານີ້ ເມື່ອເຈົ້າຮັກພຣະເຈົ້າ ເຈົ້າກໍຈະຮັກພຣະເຈົ້າຢ່າງແທ້ຈິງ ແລະ ມັນຈະເປັນຄວາມຮັກໜຶ່ງດຽວທີ່ບໍລິສຸດ. ມື້ໜຶ່ງ ເມື່ອປະສົບການດັ່ງກ່າວຂອງພວກເຈົ້າໄດ້ບັນລຸຈຸດໃດໜຶ່ງແລ້ວ ເມື່ອເຈົ້າອະທິຖານຫາພຣະເຈົ້າ, ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າຈະບໍ່ສາມາດອອກຈາກພຣະອົງທີ່ຢູ່ຂ້າງໃນໄດ້ ຫຼື ເຖິງແມ່ນວ່າເຈົ້າຕ້ອງການ ເຈົ້າກໍຈະບໍ່ສາມາດລືມພຣະອົງໄດ້. ພຣະເຈົ້າຈະກາຍມາເປັນຊີວິດຂອງເຈົ້າ; ເຈົ້າສາມາດລືມໂລກໄດ້, ເຈົ້າສາມາດລືມພັນລະຍາ, ສາມີ ຫຼື ລູກໆຂອງເຈົ້າ ແຕ່ເຈົ້າຈະມີບັນຫາໃນການລືມພຣະເຈົ້າ. ມັນເປັນໄປບໍ່ໄດ້ເລີຍ, ນີ້ຄືຊີວິດທີ່ແທ້ຈິງຂອງເຈົ້າ ແລະ ຄວາມຮັກແທ້ຈິງທີ່ເຈົ້າມີໃຫ້ພຣະເຈົ້າ. ເມື່ອຄວາມຮັກທີ່ຜູ້ຄົນມີຕໍ່ພຣະເຈົ້າໄດ້ມາເຖິງຈຸດໃດໜຶ່ງ ບໍ່ມີສິ່ງໃດອື່ນໃນຄວາມຮັກຂອງພວກເຂົາທີ່ຈະທຽບເທົ່າກັບຄວາມຮັກທີ່ພວກເຂົາມີຕໍ່ພຣະເຈົ້າ; ຄວາມຮັກຂອງພວກເຂົາສຳລັບພຣະເຈົ້າມາກ່ອນ. ດ້ວຍວິທີນີ້ ພວກເຂົາ

ສາມາດສະຫຼະສິ່ງອື່ນໆ ແລະ ເຕັມໃຈທີ່ຈະຍອມຮັບການຈັດການ ແລະ ການລິຮານທຸກຢ່າງຈາກພຣະເຈົ້າ. ເມື່ອເຈົ້າໄດ້ບັນລຸຄວາມຮັກທີ່ມີຕໍ່ພຣະເຈົ້າທີ່ຢູ່ເໜືອທຸກສິ່ງທຸກຢ່າງ ເຈົ້າຈະມີຊີວິດໃນຄວາມຈິງ ແລະ ໃນຄວາມຮັກຂອງພຣະເຈົ້າ.

ທັນທີທີ່ພຣະເຈົ້າກາຍມາເປັນຊີວິດພາຍໃນຜູ້ຄົນ ຜູ້ຄົນກໍບໍ່ສາມາດອອກຈາກພຣະເຈົ້າໄດ້. ນີ້ບໍ່ແມ່ນການກະທຳຂອງພຣະເຈົ້າບໍ? ບໍ່ມີຄຳພະຍານທີ່ຍິ່ງໃຫຍ່ກວ່ານີ້ອີກແລ້ວ! ພຣະເຈົ້າໄດ້ປະຕິບັດພາລະກິດຈົນຮອດຈຸດໃດໜຶ່ງ; ພຣະອົງໄດ້ກ່າວບອກໃຫ້ຜູ້ຄົນປະຕິບັດຮັບໃຊ້, ເພື່ອຖືກຕີສອນ ຫຼື ຕາຍ ແລະ ຜູ້ຄົນກໍຍັງບໍ່ຍອມຖອຍກັບ ເຊິ່ງສະແດງໃຫ້ເຫັນວ່າ ພວກເຂົາໄດ້ຖືກພຣະເຈົ້າເອົາຊະນະ. ຄົນທີ່ມີຄວາມຈິງແມ່ນຄົນທີ່ສາມາດຍຶດໝັ້ນໃນຄຳພະຍານຂອງພວກເຂົາໃນປະສົບການທີ່ແທ້ຈິງຂອງພວກເຂົາ, ຍຶດໝັ້ນໃນຕຳແໜ່ງຂອງພວກເຂົາ, ຢືນຢູ່ຂ້າງພຣະເຈົ້າ ໂດຍບໍ່ຖອຍຈັກເທື່ອ ແລະ ຄົນທີ່ມີຄວາມສຳພັນທີ່ປົກກະຕິກັບຄົນທີ່ຮັກພຣະເຈົ້າ ເຊິ່ງເປັນຄົນທີ່ເວລາມີຫຍັງເກີດຂຶ້ນກັບພວກເຂົາ, ພວກເຂົາກໍສາມາດເຊື່ອຟັງພຣະເຈົ້າຢ່າງສົມບູນ ແລະ ສາມາດເຊື່ອຟັງພຣະເຈົ້າຈົນເຖິງແກ່ຄວາມຕາຍ. ການປະຕິບັດ ແລະ ການເປີດເຜີຍຂອງພວກເຈົ້າໃນຊີວິດທີ່ແທ້ຈິງແມ່ນຄຳພະຍານຂອງພຣະເຈົ້າ, ມັນຄືການດຳລົງຊີວິດຂອງມະນຸດ ແລະ ຄຳພະຍານຂອງພຣະເຈົ້າ ແລະ ສິ່ງນີ້ແມ່ນການຮັບຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ; ເມື່ອເຈົ້າມີປະສົບການຈົນຮອດຈຸດນີ້ ຜົນຮັບທີ່ເໝາະສົມກໍຈະຖືກບັນລຸຜົນ. ເຈົ້າມີການດຳລົງຊີວິດທີ່ແທ້ຈິງ ແລະ ຄົນອື່ນຈະເຝົ້າເບິ່ງທຸກການກະທຳຂອງເຈົ້າດ້ວຍຄວາມຊົມຊື່ນຍິນດີ. ລັກສະນະພາຍນອກ ແລະ ການນຸ່ງຖືຂອງເຈົ້າແມ່ນທຳມະດາ ແຕ່ເຈົ້າດຳລົງຊີວິດຕາມຊີວິດທີ່ມີຄວາມສັດທາສູງທີ່ສຸດ ແລະ ເມື່ອເຈົ້າສື່ສານດ້ວຍພຣະທຳຂອງພຣະເຈົ້າ ເຈົ້າກໍຈະຖືກພຣະອົງນຳພາ ແລະ ເຮັດໃຫ້ສະຫວ່າງ. ເຈົ້າສາມາດກ່າວຄວາມປະສົງຂອງພຣະເຈົ້າຜ່ານຄຳເວົ້າຂອງເຈົ້າ, ສື່ສານດ້ວຍຄວາມເປັນຈິງ ແລະ ເຈົ້າເຂົ້າໃຈຫຼາຍຢ່າງກ່ຽວກັບການຮັບໃຊ້ໃນຝ່າຍວິນຍານ. ເຈົ້າເວົ້າກົງໄປກົງມາໃນບົດສົນທະນາຂອງເຈົ້າ, ເຈົ້າເປັນຕານັບຖື ແລະ ຊື່ຕົງ, ບໍ່ປະທະກັນ ແລະ ມີກາລະເທສະ, ສາມາດເຊື່ອຟັງການຈັດແຈງຂອງພຣະເຈົ້າ ແລະ ຍຶດໝັ້ນໃນຄຳພະຍານຂອງເຈົ້າເມື່ອມີຫຍັງເກີດຂຶ້ນກັບເຈົ້າ ແລະ ເຈົ້າໃຈເຢັນ ແລະ ສະຫງົບບໍ່ວ່າເຈົ້າກຳລັງຮັບມືກັບຫຍັງກໍຕາມ. ຄົນປະເພດນີ້ໄດ້ເຫັນຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ. ບາງຄົນຍັງໜຸ່ມຢູ່ ແຕ່ພວກເຂົາປະພຶດຕົວຄືກັບຄົນທີ່ຢູ່ໃນໄວກາງຄົນ; ພວກເຂົາເປັນຜູ້ໃຫຍ່, ມີຄວາມຈິງ ແລະ ຖືກຄົນອື່ນເຄົາລົບ ແລະ ນີ້ແມ່ນຄົນທີ່ມີຄຳພະຍານ ແລະ ເປັນການສະແດງອອກຂອງພຣະເຈົ້າ. ໝາຍຄວາມວ່າ ເມື່ອພວກເຂົາມີປະສົບການໃນຈຸດໃດໜຶ່ງ ພວກເຂົາຈະມີຄວາມເຂົ້າໃຈກ່ຽວກັບພຣະເຈົ້າຢູ່ຂ້າງໃນ ແລະ ອຸປະນິໄສພາຍນອກຂອງພວກເຂົາກໍຈະສະໝໍ່າສະເໝີເຊັ່ນດຽວກັນ. ຫຼາຍຄົນບໍ່ໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ບໍ່ຍຶດໝັ້ນໃນຄຳພະຍານຂອງພວກເຂົາ. ບໍ່ມີຄວາມຮັກຕໍ່ພຣະເຈົ້າໃນຄົນປະເພດນີ້ ຫຼື ບໍ່ມີຄຳພະຍານກ່ຽວກັບພຣະເຈົ້າ ແລະ ຄົນເຫຼົ່ານີ້ແມ່ນຄົນທີ່ພຣະເຈົ້າກຽດຊັງທີ່ສຸດ. ພວກເຂົາອ່ານພຣະທຳຂອງພຣະເຈົ້າໃນການຊຸມນຸມ ແຕ່ສິ່ງທີ່ພວກເຂົາສະແດງອອກແມ່ນຊາຕານ ແລະ ນີ້ຄືການບໍ່ໃຫ້ກຽດພຣະເຈົ້າ, ການປະນາມພຣະເຈົ້າ ແລະ ການໝິ່ນປະໝາດພຣະເຈົ້າ. ໃນຜູ້ຄົນດັ່ງກ່າວ, ບໍ່ມີສັນຍານແຫ່ງຄວາມຮັກ

ຂອງພຣະເຈົ້າ ແລະ ພວກເຂົາບໍ່ມີພາລະກິດຂອງພຣະວິນຍານບໍລິສຸດເລີຍ. ສະນັ້ນ ຄຳເວົ້າ ແລະ ການກະທຳຂອງຜູ້ຄົນຈຶ່ງເປັນຕົວແທນໃຫ້ແກ່ຊາຕານ. ບໍ່ມີໝາຍສຳຄັນແຫ່ງຄວາມຮັກຂອງພຣະເຈົ້າໃນຄົນປະເພດນີ້; ທຸກສິ່ງທີ່ພວກເຂົາສະແດງອອກແມ່ນຊາຕານ. ຖ້າຫົວໃຈຂອງເຈົ້າມີຄວາມສະຫງົບສຸກຕໍ່ໜ້າພຣະເຈົ້າຢູ່ສະເໝີ ແລະ ເຈົ້າໃຫ້ຄວາມໃສ່ໃຈກັບຜູ້ຄົນ ແລະ ສິ່ງທີ່ຢູ່ອ້ອມຂ້າງຕົວເຈົ້າ ແລະ ສິ່ງທີ່ກຳລັງເກີດຂຶ້ນອ້ອມຂ້າງຕົວເຈົ້າ ແລະ ຖ້າເຈົ້າສົນໃຈກັບພາລະຂອງພຣະເຈົ້າ ແລະ ມີຫົວໃຈທີ່ບູຊາພຣະເຈົ້າຢູ່ຕະຫຼອດເວລາ ແລ້ວພຣະເຈົ້າກໍຈະເຮັດໃຫ້ເຈົ້າສະຫວ່າງຂຶ້ນເລື້ອຍໆຢູ່ພາຍໃນ. ໃນຄຣິດສະຕະຈັກທີ່ມີ "ຜູ້ຄວບຄຸມດູແລ": ພວກເຂົາມີຈຸດປະສົງຄອຍເບິ່ງຄວາມລົ້ມເຫຼວຂອງຄົນອື່ນແລ້ວກໍຮຽນແບບ ແລະ ເຮັດຄືກັບພວກເຂົາ. ພວກເຂົາບໍ່ສາມາດຈຳແນກຄວາມແຕກຕ່າງໄດ້, ພວກເຂົາບໍ່ກຽດຊັງຄວາມບາບ ແລະ ບໍ່ລັງກຽດ ຫຼື ຮູ້ສຶກເບື່ອໜ່າຍໃນສິ່ງຕ່າງໆຂອງຊາຕານ. ຄົນປະເພດດັ່ງກ່າວເຕັມໄປດ້ວຍສິ່ງຕ່າງໆຂອງຊາຕານ ແລະ ພວກເຂົາຈະຖືກພຣະເຈົ້າປະຖິ້ມຢ່າງສິ້ນເຊີງໄປໃນທີ່ສຸດ. ຫົວໃຈຂອງເຈົ້າຄວນສະແດງຄວາມເຄົາລົບຕໍ່ໜ້າພຣະເຈົ້າສະເໝີ, ເຈົ້າຄວນຫຼຸດຜ່ອນຄຳເວົ້າ ແລະ ການກະທຳຂອງເຈົ້າ ແລະ ບໍ່ປາຖະໜາທີ່ຈະຕໍ່ຕ້ານ ຫຼື ເຮັດໃຫ້ພຣະເຈົ້າເສຍໃຈຈັກເທື່ອ. ເຈົ້າບໍ່ຄວນເຕັມໃຈທີ່ຈະເຮັດໃຫ້ພາລະກິດຂອງພຣະເຈົ້າທີ່ຢູ່ໃນຕົວເຈົ້ານັ້ນເສຍລ້າ ຫຼື ເຮັດໃຫ້ຄວາມລຳບາກທຸກຢ່າງທີ່ເຈົ້າໄດ້ອົດທົນມາ ແລະ ທຸກສິ່ງທີ່ເຈົ້າໄດ້ນຳເຂົ້າສູ່ການປະຕິບັດນັ້ນລົ້ມເຫຼວ. ເຈົ້າຕ້ອງເຕັມໃຈທີ່ຈະປະຕິບັດພາລະກິດໜັກຂຶ້ນ ແລະ ຮັກພຣະເຈົ້າຫຼາຍຂຶ້ນໃນເສັ້ນທາງທີ່ຢູ່ເບື້ອງໜ້າ. ນີ້ແມ່ນຄົນທີ່ມີນິມິດເປັນພື້ນຖານຂອງພວກເຂົາ. ນີ້ແມ່ນຄົນທີ່ສະແຫວງຫາຄວາມກ້າວໜ້າ.

ຖ້າຜູ້ຄົນເຊື່ອໃນພຣະເຈົ້າ ແລະ ມີປະສົບການກັບພຣະທຳຂອງພຣະເຈົ້າດ້ວຍຫົວໃຈທີ່ບູຊາພຣະເຈົ້າ ກໍຈະສາມາດເຫັນຄວາມລອດພົ້ນ ແລະ ຄວາມຮັກຂອງພຣະເຈົ້າໄດ້. ຄົນເຫຼົ່ານີ້ສາມາດເປັນພະຍານໃຫ້ກັບພຣະເຈົ້າ; ພວກເຂົາດຳລົງຊີວິດຕາມຄວາມຈິງ ແລະ ສິ່ງທີ່ພວກເຂົາເປັນພະຍານຕໍ່ກໍແມ່ນຄວາມຈິງ, ແມ່ນສິ່ງທີ່ພຣະເຈົ້າເປັນ ແລະ ແມ່ນອຸປະນິໄສຂອງພຣະເຈົ້າເຊັ່ນດຽວກັນ. ພວກເຂົາດຳລົງຊີວິດທ່າມກາງຄວາມຮັກຂອງພຣະເຈົ້າ ແລະ ໄດ້ເຫັນຄວາມຮັກຂອງພຣະເຈົ້າ. ຖ້າຄົນທີ່ປາຖະໜາຮັກພຣະເຈົ້າ ພວກເຂົາຕ້ອງຊີມລົດຊາດແຫ່ງຄວາມເປັນຕາຮັກຂອງພຣະເຈົ້າ ແລະ ເຫັນຄວາມເປັນຕາຮັກຂອງພຣະເຈົ້າ; ມີພຽງແຕ່ຕອນນີ້ຈຶ່ງຈະມີການປຸກຫົວໃຈທີ່ຮັກພຣະເຈົ້າໃນຕົວພວກເຂົາ ເຊິ່ງເປັນຫົວໃຈທີ່ດົນບັນດານໃຈຜູ້ຄົນໃຫ້ເສຍສະຫຼະຕົນເອງເພື່ອພຣະເຈົ້າຢ່າງຊື່ສັດ. ພຣະເຈົ້າບໍ່ເຮັດໃຫ້ຜູ້ຄົນຮັກພຣະອົງໂດຍຜ່ານຄຳເວົ້າ ແລະ ການສະແດງອອກ ຫຼື ຜ່ານຈິນຕະນາການຂອງພວກເຂົາ ແລະ ພຣະອົງບໍ່ບັງຄັບໃຫ້ຜູ້ຄົນຮັກພຣະອົງ. ກົງກັນຂ້າມ ພຣະອົງປ່ອຍໃຫ້ພວກເຂົາຮັກພຣະເຈົ້າດ້ວຍຄວາມສະໝັກໃຈຂອງພວກເຂົາເອງ ແລະ ພຣະອົງປ່ອຍໃຫ້ພວກເຂົາເຫັນຄວາມເປັນຕາຮັກຂອງພຣະອົງໃນພາລະກິດ ແລະ ຖ້ອຍຄຳຂອງພຣະອົງ ຫຼັງຈາກນັ້ນ ພວກເຂົາຈຶ່ງຈະມີຄວາມຮັກຕໍ່ພຣະເຈົ້າ. ມີພຽງແຕ່ວິທີນີ້ເທົ່ານັ້ນ ຜູ້ຄົນຈຶ່ງເປັນພະຍານໃຫ້ກັບພຣະເຈົ້າຢ່າງແທ້ຈິງ. ຜູ້ຄົນບໍ່ຮັກພຣະເຈົ້າຍ້ອນພວກເຂົາຖືກຄົນອື່ນຍົວະໃຫ້ຮັກພຣະອົງ ຫຼື ຍ້ອນແຮງດົນໃຈທາງອາລົມຊົ່ວຄາວ. ພວກເຂົາຮັກພຣະເຈົ້າຍ້ອນພວກເຂົາໄດ້ເຫັນຄວາມເປັນຕາຮັກຂອງພຣະອົງ, ພວກເຂົາໄດ້

ເຫັນວ່າ ມີຫຼາຍສິ່ງຫຼາຍຢ່າງກ່ຽວກັບພຣະເຈົ້າທີ່ສົມຄວນແກ່ຄວາມຮັກຂອງຜູ້ຄົນ ຍ້ອນພວກເຂົາໄດ້ເຫັນຄວາມລອດພົ້ນ, ສະຕິປັນຍາ ແລະ ການກະທຳທີ່ມະຫັດສະຈັນຂອງພຣະເຈົ້າ; ຜົນຕາມມາກໍຄື ພວກເຂົາສັນລະເສີນພຣະເຈົ້າຢ່າງແທ້ຈິງ ແລະ ປາຖະໜາຫາພຣະອົງຢ່າງແທ້ຈິງ ແລະ ມີການກະຕຸ້ນຄວາມຫຼົງໄຫຼດັ່ງກ່າວໃນພວກເຂົາຈົນວ່າພວກເຂົາບໍ່ສາມາດຢູ່ລອດໄດ້ ຫາກປາສະຈາກການໄດ້ຮັບຈາກພຣະເຈົ້າ. ເຫດຜົນທີ່ວ່າ ເປັນຫຍັງຄົນທີ່ເປັນພະຍານໃຫ້ກັບພຣະເຈົ້າຢ່າງແທ້ຈິງຈຶ່ງສາມາດເປັນພະຍານຢ່າງໜັກແໜ້ນໃຫ້ກັບພຣະອົງໄດ້ກໍຍ້ອນຄຳພະຍານຂອງພວກເຂົາແມ່ນຂຶ້ນຢູ່ກັບພື້ນຖານແຫ່ງຄວາມຮູ້ທີ່ແທ້ຈິງ ແລະ ຄວາມປາຖະໜາຫາພຣະເຈົ້າຢ່າງແທ້ຈິງ. ຄຳພະຍານດັ່ງກ່າວບໍ່ແມ່ນສະແດງອອກຕາມແຮງກະຕຸ້ນທາງອາລົມ ແຕ່ຕາມຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າ ແລະ ອຸປະນິໄສຂອງພຣະອົງ. ເພາະພວກເຂົາໄດ້ຮຽນຮູ້ຈັກພຣະເຈົ້າ, ພວກເຂົາຈຶ່ງຮູ້ສຶກວ່າ ພວກເຂົາຕ້ອງເປັນພະຍານໃຫ້ກັບພຣະເຈົ້າຢ່າງແນ່ນອນ ແລະ ເຮັດໃຫ້ທຸກຄົນທີ່ປາຖະໜາຫາພຣະເຈົ້ານັ້ນຮູ້ຈັກພຣະເຈົ້າ ແລະ ຮູ້ຕົວກ່ຽວກັບຄວາມເປັນຕາຮັກຂອງພຣະເຈົ້າ ແລະ ຄວາມເປັນຈິງຂອງພຣະອົງ. ຄືກັບຄວາມຮັກທີ່ຜູ້ຄົນມີໃຫ້ພຣະເຈົ້າ ຄຳພະຍານຂອງພວກເຂົາກໍບໍ່ໄດ້ຖືກບັງຄັບ; ມັນເປັນຈິງ ແລະ ມີຄວາມສຳຄັນ ແລະ ຄຸນຄ່າທີ່ແທ້ຈິງ. ມັນບໍ່ໄດ້ຢູ່ຊື່ໆ ຫຼື ເປົ່າຫວ່າງ ແລະ ບໍ່ມີຄວາມໝາຍ. ເຫດຜົນທີ່ວ່າເປັນຫຍັງມີພຽງແຕ່ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງເທົ່ານັ້ນທີ່ມີຄຸນຄ່າ ແລະ ຄວາມໝາຍທີ່ສຸດໃນຊີວິດຂອງພວກເຂົາ, ເຫດຜົນທີ່ພວກເຂົາເທົ່ານັ້ນທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງກໍຄືຄົນເຫຼົ່ານີ້ສາມາດດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະເຈົ້າ ແລະ ສາມາດດຳລົງຊີວິດເພື່ອພາລະກິດ ແລະ ການຄຸ້ມຄອງຂອງພຣະເຈົ້າ. ມັນເປັນຍ້ອນວ່າ ພວກເຂົາບໍ່ໄດ້ດຳລົງຊີວິດຢູ່ໃນຄວາມມືດ, ແຕ່ດຳລົງຊີວິດໃນແສງສະຫວ່າງ; ພວກເຂົາບໍ່ໄດ້ດຳລົງຊີວິດຢ່າງໄຮ້ຄວາມໝາຍ ແຕ່ເປັນຊີວິດທີ່ໄດ້ຮັບການອວຍພອນຈາກພຣະເຈົ້າ. ມີພຽງຄົນທີ່ຮັກພຣະເຈົ້າເທົ່ານັ້ນທີ່ສາມາດເປັນພະຍານໃຫ້ກັບພຣະເຈົ້າ, ມີພຽງພວກເຂົາເທົ່ານັ້ນທີ່ເປັນພະຍານຂອງພຣະອົງ, ມີພຽງພວກເຂົາເທົ່ານັ້ນທີ່ໄດ້ຮັບການອວຍພອນຈາກພຣະເຈົ້າ ແລະ ມີພຽງພວກເຂົາເທົ່ານັ້ນທີ່ສາມາດຮັບສັນຍາຂອງພຣະເຈົ້າ. ຄົນທີ່ຮັກພຣະເຈົ້າແມ່ນມິດສະຫາຍຂອງພຣະເຈົ້າ; ພວກເຂົາແມ່ນຄົນທີ່ພຣະເຈົ້າຮັກ ແລະ ພວກເຂົາສາມາດຊື່ນຊົມກັບການອວຍພອນຮ່ວມກັນກັບພຣະເຈົ້າ. ມີພຽງແຕ່ຄົນປະເພດດັ່ງກ່າວນີ້ຈະດຳລົງຊີວິດຕະຫຼອດໄປເປັນນິດ ແລະ ມີພຽງແຕ່ພວກເຂົາເທົ່ານັ້ນທີ່ຈະດຳລົງຊີວິດຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະເຈົ້າຕະຫຼອດໄປ. ພຣະເຈົ້າມີໄວ້ເພື່ອໃຫ້ຜູ້ຄົນຮັກ ແລະ ພຣະອົງສົມຄວນແກ່ຄວາມຮັກທັງໝົດຂອງທຸກຄົນແຕ່ບໍ່ແມ່ນໝົດທຸກຄົນທີ່ສາມາດຮັກພຣະເຈົ້າໄດ້ ແລະ ບໍ່ແມ່ນໝົດທຸກຄົນທີ່ສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້ ແລະ ຖືສິດອຳນາດກັບພຣະເຈົ້າ. ຍ້ອນພວກເຂົາສາມາດເປັນພະຍານໃຫ້ກັບພຣະເຈົ້າ ແລະ ອຸທິດຄວາມພະຍາຍາມທັງໝົດເຂົ້າໃນພາລະກິດຂອງພຣະເຈົ້າໄດ້ ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງຈຶ່ງສາມາດຍ່າງໃນທຸກບ່ອນທີ່ຢູ່ລຸ່ມສະຫວັນໂດຍບໍ່ມີໃຜກ້າຕໍ່ຕ້ານພວກເຂົາ ແລະ ພວກເຂົາສາມາດໃຊ້ສິດອຳນາດເທິງແຜ່ນດິນໂລກ ແລະ ປົກຄອງທຸກປະຊາຊົນຂອງພຣະເຈົ້າທຸກຄົນ. ຄົນເຫຼົ່ານີ້ໄດ້ມາຮ່ວມກັນຈາກທົ່ວທັງແຜ່ນດິນໂລກ. ພວກເຂົາເວົ້າພາສາທີ່ແຕກຕ່າງກັນ ແລະ ມີສີຜິວທີ່ແຕກຕ່າງກັນ

ແຕ່ການເປັນຢູ່ຂອງພວກເຂົາແມ່ນມີຄວາມໝາຍດຽວກັນ; ພວກເຂົາທັງໝົດມີຫົວໃຈທີ່ຮັກພຣະເຈົ້າ, ພວກເຂົາທັງໝົດເປັນພະຍານແບບດຽວກັນ ແລະ ມີຄວາມເດັດດ່ຽວທີ່ຄືກັນ ແລະ ມີຄວາມປາຖະໜາທີ່ແບບດຽວກັນ. ຄົນທີ່ຮັກພຣະເຈົ້າສາມາດເດີນຍ່າງຢ່າງມີອິດສະຫຼະທົ່ວທັງແຜ່ນດິນໂລກ ແລະ ຄົນທີ່ເປັນພະຍານໃຫ້ກັບພຣະເຈົ້າສາມາດເດີນທາງຂ້າມຜ່ານຈັກກະວານ. ຄົນເຫຼົ່ານີ້ເປັນທີ່ຮັກຂອງພຣະເຈົ້າ, ພວກເຂົາໄດ້ຮັບການອວຍພອນຈາກພຣະເຈົ້າ ແລະ ພວກເຂົາຈະດຳລົງຊີວິດໃນແສງສະຫວ່າງພາຍໃນພຣະອົງຕະຫຼອດໄປ.

# ມີພຽງບັນດາຜູ້ທີ່ໃສ່ໃຈການປະຕິບັດເທົ່ານັ້ນ ທີ່ສາມາດຖືກເຮັດໃຫ້ສົມບູນ

ໃນຍຸກສຸດທ້າຍ, ພຣະເຈົ້າໄດ້ກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ ແລະ ເພື່ອປະຕິບັດພັນທະກິດແຫ່ງພຣະທຳຂອງພຣະອົງ. ພຣະອົງສະເດັດມາດ້ວຍຕົວພຣະອົງເອງເພື່ອປະຕິບັດພາລະກິດຢູ່ທ່າມກາງມວນມະນຸດ ພ້ອມກັບເປົ້າໝາຍແຫ່ງການເຮັດໃຫ້ຜູ້ທີ່ພຣະອົງພໍໃຈສົມບູນ. ນັບຕັ້ງແຕ່ເວລາການສ້າງໂລກຈົນມາຮອດປັດຈຸບັນນີ້, ພຣະອົງປະຕິບັດພາລະກິດປະເພດນີ້ໃນໄລຍະຍຸກສຸດທ້າຍເທົ່ານັ້ນ. ມີພຽງໄລຍະຍຸກສຸດທ້າຍເທົ່ານັ້ນທີ່ພຣະເຈົ້າໄດ້ກາຍເປັນມະນຸດເພື່ອປະຕິບັດພາລະກິດທີ່ໃຫຍ່ຂະໜາດນັ້ນ. ເຖິງແມ່ນວ່າພຣະອົງທົນກັບຄວາມຍາກລຳບາກທີ່ຄົນຈະພົບວ່າເປັນການຍາກທີ່ຈະທົນໄດ້ ແລະ ເຖິງແມ່ນວ່າພຣະອົງຜູ້ເປັນພຣະເຈົ້າອົງຍິ່ງໃຫຍ່ແຕ່ກໍຍັງມີຄວາມອ່ອນນ້ອມເພື່ອກາຍເປັນມະນຸດທຳມະດາຄົນໜຶ່ງ, ບໍ່ມີພາລະກິດດ້ານໃດຂອງພຣະອົງທີ່ຊັກຊ້າ ແລະ ຢ່າງໜ້ອຍ ແຜນການຂອງພຣະອົງກໍບໍ່ໄດ້ຕົກຢູ່ໃນຄວາມສັບສົນ. ພຣະອົງກຳລັງປະຕິບັດພາລະກິດຕາມແຜນການເດີມຂອງພຣະອົງ. ໜຶ່ງໃນຈຸດປະສົງແຫ່ງການບັງເກີດເປັນມະນຸດນີ້ແມ່ນເພື່ອເອົາຊະນະຜູ້ຄົນ. ອີກຈຸດໜຶ່ງແມ່ນເພື່ອເຮັດໃຫ້ຄົນທີ່ພຣະອົງຮັກສົມບູນ. ພຣະອົງປາດຖະໜາຢາກເຫັນຄົນທີ່ພຣະອົງເຮັດໃຫ້ສົມບູນດ້ວຍຕາຂອງພຣະອົງເອງ ແລະ ພຣະອົງຢາກເຫັນດ້ວຍພຣະອົງເອງວ່າຄົນທີ່ພຣະອົງເຮັດໃຫ້ສົມບູນນັ້ນເປັນປະຈັກພະຍານໃຫ້ພຣະອົງແນວໃດ. ມັນບໍ່ແມ່ນຄົນດຽວ ຫຼື ສອງຄົນທີ່ຖືກເຮັດໃຫ້ສົມບູນ. ກົງກັນຂ້າມ, ມັນເປັນກຸ່ມທີ່ພຽງປະກອບມີສອງສາມຄົນເທົ່ານັ້ນ. ຜູ້ຄົນທີ່ຢູ່ກຸ່ມນີ້ມາຈາກຫຼາກຫຼາຍປະເທດໃນໂລກ ແລະ ມາຈາກຫຼາກຫຼາຍເຊື້ອຊາດຂອງໂລກ. ວັດຖຸປະສົງແຫ່ງການປະຕິບັດພາລະກິດຫຼວງຫຼາຍເຊັ່ນນີ້ກໍແມ່ນເພື່ອໃຫ້ໄດ້ຄົນກຸ່ມນີ້ມາ, ເພື່ອໃຫ້ໄດ້ຄົນກຸ່ມນີ້ມາເປັນປະຈັກພະຍານໃຫ້ກັບພຣະອົງ ແລະ ເພື່ອໄດ້ຮັບສະຫງ່າລາສີທີ່ອາດຈະເກີດຈາກພວກເຂົາ. ພຣະອົງບໍ່ປະຕິບັດພາລະກິດທີ່ບໍ່ມີຄວາມສຳຄັນ ຫຼື ປະຕິບັດພາລະກິດທີ່ບໍ່ມີຄຸນຄ່າ. ສາມາດເວົ້າໄດ້ວ່າ, ໃນການປະຕິບັດພາລະກິດຫຼວງຫຼາຍເຊັ່ນນີ້, ເປົ້າໝາຍຂອງພຣະເຈົ້າແມ່ນເພື່ອເຮັດໃຫ້ບັນດາຜູ້ທີ່ພຣະອົງປາດຖະໜາຢາກເຮັດໃຫ້ສົມບູນທັງໝົດສົມບູນ. ນອກຈາກສິ່ງນີ້ແລ້ວ ເມື່ອພຣະອົງມີເວລາຫວ່າງ, ພຣະອົງກໍຈະກຳຈັດບັນດາຄົນຊົ່ວຮ້າຍ. ຮູ້ໄວ້ວ່າ ພຣະອົງບໍ່ໄດ້ປະຕິບັດພາລະກິດທີ່ຍິ່ງໃຫຍ່ນີ້ຍ້ອນຄົນຊົ່ວຮ້າຍ; ແຕ່ກົງກັນຂ້າມ, ພຣະອົງມອບທຸກສິ່ງທຸກຢ່າງຂອງພຣະອົງກໍຍ້ອນຄົນຈຳນວນນ້ອຍທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະອົງ. ພາລະກິດທີ່ພຣະອົງປະຕິບັດ, ພຣະທຳທີ່ພຣະອົງກ່າວ, ຄວາມເລິກລັບທີ່ພຣະອົງເປີດເຜີຍ ແລະ ການພິພາກສາ ແລະ ການຂ້ຽນຕີຂອງພຣະອົງ ທັງໝົດແມ່ນເພື່ອຄົນຈຳນວນນ້ອຍເຫຼົ່ານັ້ນ. ພຣະອົງບໍ່ໄດ້ກາຍເປັນເນື້ອໜັງຍ້ອນບັນດາຄົນຊົ່ວຮ້າຍ ແລະ ແຮງໄກທີ່ຄົນຊົ່ວຮ້າຍເຫຼົ່ານັ້ນຈະຍຸແຍ່ຄວາມໂກດຮ້າຍອັນຍິ່ງໃຫຍ່ໃນຕົວພຣະອົງ. ພຣະອົງກ່າວຄວາມຈິງ ແລະ ເວົ້າເຖິງທາງເຂົ້າສູ່, ຍ້ອນບັນດາຜູ້ທີ່ຈະຖືກເຮັດໃຫ້ສົມບູນ, ພຣະອົງຈຶ່ງໄດ້ກາຍມາເປັນເນື້ອໜັງຍ້ອນພວກເຂົາ ແລະ ເປັນຍ້ອນພວກເຂົາ ພຣະອົງຈຶ່ງໄດ້ປະທານຄຳສັນຍາ ແລະ ພອນຂອງພຣະອົງ.

ຄວາມຈິງ, ທາງເຂົ້າສູ່ ແລະ ຊີວິດໃນຄວາມເປັນມະນຸດທີ່ພຣະອົງກ່າວເຖິງນັ້ນ ບໍ່ແມ່ນເພື່ອຜົນປະໂຫຍດຂອງບັນດາຄົນຊົ່ວຮ້າຍ. ພຣະອົງຫຼີກເວັ້ນທີ່ຈະເວົ້າກັບບັນດາຄົນຊົ່ວຮ້າຍ ກົງກັນຂ້າມປາດຖະໜາທີ່ຈະມອບຄວາມຈິງທັງໝົດໃຫ້ແກ່ບັນດາຜູ້ທີ່ຈະຖືກເຮັດໃຫ້ສົມບູນ. ແຕ່ສຳລັບໃນຕອນນີ້ພາລະກິດຂອງພຣະອົງຕ້ອງການກໍຄືອະນຸຍາດໃຫ້ບັນດາຄົນຊົ່ວຮ້າຍໄດ້ຮັບຄວາມອຸດົມສົມບູນບາງຢ່າງຈາກພຣະອົງ. ບັນດາຜູ້ທີ່ບໍ່ປະຕິບັດຕາມຄວາມຈິງ, ຜູ້ບໍ່ເຮັດຕາມໃຈພຣະເຈົ້າ ແລະ ຜູ້ທີ່ຂັດຂວາງພາລະກິດຂອງພຣະອົງແມ່ນຄົນຊົ່ວຮ້າຍທັງໝົດ. ພວກເຂົາບໍ່ສາມາດຖືກເຮັດໃຫ້ສົມບູນໄດ້ ແລະ ຖືກພຣະເຈົ້າລັງກຽດ ແລະ ປະຕິເສດ. ກົງກັນຂ້າມ, ຄົນທີ່ນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ສາມາດເຮັດໃຫ້ພຣະເຈົ້າພໍໃຈ ແລະ ຜູ້ທີ່ເສຍສະຫຼະຕົນເອງທັງໝົດເຂົ້າໃນພາລະກິດຂອງພຣະເຈົ້າ ແມ່ນຜູ້ທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ບັນດາຜູ້ທີ່ພຣະເຈົ້າປາດຖະໜາໃຫ້ສົມບູນບໍ່ແມ່ນຜູ້ໃດນອກຈາກຄົນກຸ່ມນີ້ ແລະ ພາລະກິດທີ່ພຣະເຈົ້າປະຕິບັດແມ່ນເພື່ອຄົນເຫຼົ່ານີ້. ຄວາມຈິງທີ່ພຣະອົງກ່າວນັ້ນແນໃສ່ຄົນທີ່ເຕັມໃຈນຳເອົາມັນໄປປະຕິບັດຕາມ. ພຣະອົງບໍ່ໄດ້ກ່າວກັບຄົນທີ່ບໍ່ນຳເອົາຄວາມຈິງໄປປະຕິບັດຕາມ. ການເພີ່ມຄວາມເຂົ້າໃຈ ແລະ ການເຕີບໂຕໃນຄວາມສາມາດເຫັນແຈ້ງທີ່ພຣະອົງກ່າວເຖິງແມ່ນແນໃສ່ຄົນທີ່ສາມາດປະຕິບັດຕາມຄວາມຈິງ. ເມື່ອພຣະອົງກ່າວເຖິງບັນດາຜູ້ທີ່ຈະຖືກເຮັດໃຫ້ສົມບູນ, ນັ້ນກໍຄືຜູ້ຄົນເຫຼົ່ານີ້ທີ່ພຣະອົງກ່າວເຖິງ. ພາລະກິດຂອງພຣະວິນຍານບໍລິສຸດນັ້ນແນໃສ່ຄົນທີ່ເຕັມໃຈທີ່ຈະປະຕິບັດຕາມຄວາມຈິງ. ສິ່ງຕ່າງໆເຊັ່ນ: ການມີສະຕິປັນຍາ ແລະ ຄວາມເປັນມະນຸດແມ່ນແນໃສ່ຄົນທີ່ເຕັມໃຈນຳເອົາຄວາມຈິງໄປປະຕິບັດ. ບັນດາຜູ້ທີ່ບໍ່ປະຕິບັດຕາມຄວາມຈິງອາດໄດ້ຍິນຄວາມຈິງຫຼາຍປະການ, ແຕ່ຍ້ອນວ່າພວກເຂົາເປັນຄົນຊົ່ວຮ້າຍໂດຍທຳມະຊາດ ແລະ ບໍ່ສົນໃຈໃນຄວາມຈິງ, ສິ່ງທີ່ພວກເຂົາເຂົ້າໃຈແມ່ນເປັນພຽງຫຼັກຄຳສອນ ແລະ ຄຳເວົ້າເທົ່ານັ້ນ ແລະ ທິດສະດີທີ່ວ່າງເປົ່າ ໂດຍບໍ່ມີຄຸນຄ່າແມ່ນແຕ່ໜ້ອຍດຽວສຳລັບການເຂົ້າສູ່ຊີວິດຂອງພວກເຂົາ. ບໍ່ມີໃຜໃນພວກເຂົາທີ່ພັກດີຕໍ່ພຣະເຈົ້າ; ພວກເຂົາທັງໝົດແມ່ນຄົນທີ່ເຫັນພຣະເຈົ້າ ແຕ່ບໍ່ສາມາດຮັບເອົາພຣະອົງ ແລະ ພວກເຂົາທັງໝົດແມ່ນຖືກພຣະເຈົ້າປະນາມ.

ພຣະວິນຍານບໍລິສຸດມີເສັ້ນທາງທີ່ຈະຍ່າງຢູ່ໃນແຕ່ລະຄົນ ແລະ ມອບໂອກາດໃຫ້ແຕ່ລະຄົນໄດ້ຖືກເຮັດໃຫ້ສົມບູນ. ຜ່ານຄວາມຄິດລົບຂອງເຈົ້າ, ເຈົ້າໄດ້ຖືກເຮັດໃຫ້ຮູ້ຈັກຄວາມເສື່ອມຊາມຂອງຕົວເຈົ້າເອງ ແລະ ຫຼັງຈາກນັ້ນ ຜ່ານການໂຍນຄວາມຄິດລົບຖິ້ມ ເຈົ້າຈະພົບເສັ້ນທາງປະຕິບັດ; ສິ່ງທັງໝົດເຫຼົ່ານີ້ຄືວິທີທາງທີ່ຈະເຮັດໃຫ້ເຈົ້າສົມບູນ. ຍິ່ງໄປກວ່ານັ້ນ, ຜ່ານການນຳພາຢ່າງຕໍ່ເນື່ອງ ແລະ ການສ່ອງແສງສະຫວ່າງຂອງສິ່ງດີໆບາງຢ່າງຢູ່ໃນຕົວເຈົ້າ, ເຈົ້າຈະປະຕິບັດໜ້າທີ່ຂອງເຈົ້າຢ່າງຫ້າວຫັນ, ເຕີບໂຕຂຶ້ນໃນຄວາມເຂົ້າໃຈ ແລະ ໄດ້ຮັບຄວາມຮູ້ແຈ້ງ. ເມື່ອສະພາບຂອງເຈົ້າດີ, ເຈົ້າຈະເຕັມໃຈອ່ານພຣະທຳຂອງພຣະເຈົ້າເປັນພິເສດ ແລະ ເຕັມໃຈອະທິຖານຫາພຣະເຈົ້າເປັນພິເສດ ແລະ ສາມາດເຊື່ອມໂຍງຄຳເທດສະໜາທີ່ເຈົ້າໄດ້ຍິນເຂົ້າກັບສະຖານະພາບຂອງຕົວເຈົ້າເອງ. ໃນເວລາດັ່ງກ່າວພຣະເຈົ້າສ່ອງແສງສະຫວ່າງ ແລະ ແສງເຍືອງທາງພາຍໃນຕົວເຈົ້າ, ເຮັດໃຫ້ເຈົ້າຮູ້ເຫັນບາງສິ່ງໃນດ້ານບວກ. ນີ້ຄືວິທີທີ່ເຈົ້າຈະຖືກເຮັດໃຫ້ສົມບູນໃນດ້ານບວກ. ໃນສະພາບດ້ານລົບ, ເຈົ້າອ່ອນແອ

ແລະ ເປັນຄົນຂີ້ຄ້ານ; ເຈົ້າຮູ້ສຶກວ່າເຈົ້າບໍ່ມີພຣະເຈົ້າຢູ່ໃນຫົວໃຈຂອງເຈົ້າ, ແຕ່ພຣະເຈົ້າກໍຍັງສ່ອງແສງສະຫວ່າງໃຫ້ກັບເຈົ້າ, ຊ່ວຍໃຫ້ເຈົ້າພົບເສັ້ນທາງປະຕິບັດ. ຜົນໄດ້ຮັບຈາກສິ່ງນີ້ຄືການບັນລຸຄວາມສົມບູນໃນດ້ານລົບ. ພຣະເຈົ້າສາມາດເຮັດໃຫ້ມະນຸດສົມບູນໄດ້ທັງດ້ານບວກ ແລະ ດ້ານລົບ. ມັນຂຶ້ນຢູ່ກັບວ່າເຈົ້າສາມາດປະສົບໄດ້ ຫຼື ບໍ່ ແລະ ຂຶ້ນຢູ່ກັບວ່າເຈົ້າສະແຫວງຫາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ ຫຼື ບໍ່. ຖ້າເຈົ້າສະແຫວງຫາທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນຢ່າງແທ້ຈິງ, ແລ້ວສິ່ງທີ່ເປັນລົບກໍບໍ່ສາມາດເຮັດໃຫ້ເຈົ້າໄດ້ຮັບຄວາມສູນເສຍໄດ້, ແຕ່ຈະສາມາດນຳເອົາສິ່ງທີ່ເປັນຈິງຫຼາຍກວ່າມາໃຫ້ເຈົ້າ ແລະ ສາມາດເຮັດໃຫ້ເຈົ້າຮູ້ໄດ້ຫຼາຍຂຶ້ນວ່າມີສິ່ງໃດທີ່ຍັງຂາດເຂີນໃນຕົວເຈົ້າ, ສາມາດເຂົ້າໃຈສະຖານະພາບທີ່ແທ້ຈິງຂອງເຈົ້າຫຼາຍຂຶ້ນ ແລະ ເຫັນວ່າມະນຸດບໍ່ມີຫຍັງ ແລະ ກໍບໍ່ແມ່ນຫຍັງ; ຖ້າເຈົ້າບໍ່ປະສົບກັບການທົດລອງ, ເຈົ້າກໍບໍ່ຮູ້ ແລະ ຈະຮູ້ສຶກວ່າເຈົ້າຢູ່ເໜືອຄົນອື່ນ ແລະ ດີກວ່າຄົນອື່ນຢູ່ສະເໝີ. ຜ່ານສິ່ງທັງໝົດນີ້ ເຈົ້າຈະເຫັນວ່າທຸກສິ່ງທີ່ມາກ່ອນໜ້ານີ້ໄດ້ຖືກເຮັດໃຫ້ສຳເລັດລົງໂດຍພຣະເຈົ້າ ແລະ ຖືກປົກປ້ອງໂດຍພຣະເຈົ້າ. ການເຂົ້າສູ່ການທົດລອງເຮັດໃຫ້ເຈົ້າປາສະຈາກຄວາມຮັກ ຫຼື ຄວາມເຊື່ອ, ເຈົ້າຂາດການອະທິຖານ ແລະ ບໍ່ສາມາດຮ້ອງເພງນະມັດສະການ ແລະ ໂດຍບໍ່ຮູ້ຕົວ, ໃນທ່າມກາງສິ່ງນີ້ ເຈົ້າກໍໄດ້ມາຮູ້ຈັກຕົວຕົນຂອງເຈົ້າເອງ. ພຣະເຈົ້າມີຫຼາຍວິທີທາງໃນການເຮັດໃຫ້ມະນຸດສົມບູນ. ພຣະອົງໃຊ້ສະພາບແວດລ້ອມທຸກຮູບແບບເພື່ອຈັດການກັບອຸປະນິໄສອັນເສື່ອມຊາມຂອງມະນຸດ ແລະ ໃຊ້ຫຼາກຫຼາຍສິ່ງເພື່ອເປີດເຜີຍມະນຸດ; ໃນດ້ານໜຶ່ງ ພຣະອົງຈັດການກັບມະນຸດ, ອີກດ້ານໜຶ່ງພຣະອົງເປີດໂປງມະນຸດ ແລະ ໃນອີກດ້ານໜຶ່ງພຣະອົງເປີດເຜີຍມະນຸດ, ຂຸດອອກ ແລະ ເປີດເຜີຍ “ຄວາມເລິກລັບຕ່າງໆ” ໃນສ່ວນເລິກຂອງຫົວໃຈມະນຸດ ແລະ ສະແດງໃຫ້ມະນຸດເຫັນທຳມະຊາດຂອງເຂົາໂດຍການເປີດເຜີຍສະຖານະພາບຕ່າງໆຂອງເຂົາ. ພຣະເຈົ້າເຮັດໃຫ້ມະນຸດສົມບູນຜ່ານຫຼາກຫຼາຍວິທີການ, ຜ່ານການເປີດເຜີຍ, ຜ່ານການຈັດການກັບມະນຸດ, ຜ່ານການຫຼໍ່ຫຼອມມະນຸດ ແລະ ການຂ້ຽນຕີເພື່ອວ່າມະນຸດຈະໄດ້ຮູ້ຈັກວ່າພຣະເຈົ້າຄືຄວາມເປັນຈິງ.

ແມ່ນຫຍັງຄືສິ່ງທີ່ພວກເຈົ້າສະແຫວງຫາໃນຕອນນີ້? ເພື່ອຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ, ເພື່ອຮູ້ຈັກພຣະເຈົ້າ, ເພື່ອຮັບເອົາພຣະເຈົ້າ ຫຼື ບາງທີພວກເຈົ້າສະແຫວງຫາເພື່ອປະຕິບັດຕົນເອງໃນຮູບແບບເປໂຕແຫ່ງປີ 90 ຫຼື ເພື່ອມີຄວາມສັດທາທີ່ຍິ່ງໃຫຍ່ກວ່າໂຢບ ຫຼື ທາງທີພວກເຈົ້າສະແຫວງຫາເພື່ອໃຫ້ຖືກເອີ້ນວ່າເປັນຄົນຊອບທຳໂດຍພຣະເຈົ້າ ແລະ ມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ ຫຼື ເພື່ອຈະສາມາດສະແດງເຖິງພຣະເຈົ້າເທິງແຜ່ນດິນໂລກ ແລະ ເພື່ອເປັນປະຈັກພະຍານທີ່ເຂັ້ມແຂງ ແລະ ດັງກ້ອງກັງວານໃຫ້ແກ່ພຣະເຈົ້າ. ບໍ່ວ່າພວກເຈົ້າສະແຫວງຫາສິ່ງໃດ, ໂດຍລວມແລ້ວ ພວກເຈົ້າແມ່ນສະແຫວງຫາເພື່ອຖືກຊ່ວຍໃຫ້ລອດພົ້ນໂດຍພຣະເຈົ້າ. ບໍ່ວ່າເຈົ້າຈະສະແຫວງຫາເພື່ອເປັນຜູ້ຊອບທຳ ຫຼື ເຈົ້າສະແຫວງຫາໃນຮູບແບບຂອງເປໂຕ ຫຼື ຄວາມເຊື່ອຂອງໂຢບ ຫຼື ເພື່ອຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ, ບໍ່ວ່າເຈົ້າຈະສະແຫວງຫາສິ່ງໃດ, ທັງໝົດແມ່ນພາລະກິດທີ່ພຣະເຈົ້າປະຕິບັດໃນມະນຸດ. ເວົ້າອີກຢ່າງໜຶ່ງກໍຄື ບໍ່ວ່າເຈົ້າຈະສະແຫວງຫາສິ່ງໃດ, ທັງໝົດແມ່ນເພື່ອຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ, ທັງໝົດແມ່ນເພື່ອປະສົບກັບພຣະທຳຂອງພຣະເຈົ້າ, ເພື່ອເຮັດໃຫ້ຫົວໃຈຂອງພຣະເຈົ້າພໍໃຈ;

ບໍ່ວ່າເຈົ້າຈະສະແຫວງຫາສິ່ງໃດ, ທັງໝົດແມ່ນເພື່ອຄົ້ນຫາຄວາມໜ້າຮັກຂອງພຣະເຈົ້າ, ເພື່ອຊອກຫາເສັ້ນທາງສູ່ການປະຕິບັດໃນປະສົບການຕົວຈິງ ໂດຍມີເປົ້າໝາຍໃນການສາມາດທີ່ຈະປະຖິ້ມອຸປະນິໄສກະບົດຂອງເຈົ້າ, ບັນລຸສະພາບປົກກະຕິໃນຕົວເຈົ້າເອງ, ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້ຢ່າງຄົບຖ້ວນ, ເພື່ອກາຍເປັນຄົນດີ ແລະ ເພື່ອມີແຮງຈູງໃຈທີ່ຖືກຕ້ອງໃນທຸກສິ່ງທີ່ເຈົ້າເຮັດ. ເຫດຜົນທີ່ເຈົ້າປະສົບກັບສິ່ງຕ່າງໆເຫຼົ່ານີ້ທັງໝົດແມ່ນເພື່ອໄດ້ມາຮູ້ຈັກພຣະເຈົ້າ ແລະ ບັນລຸການຈະເລີນເຕີບໂຕຂອງຊີວິດ. ເຖິງແມ່ນວ່າສິ່ງທີ່ເຈົ້າຜະເຊີນແມ່ນພຣະທຳຂອງພຣະເຈົ້າ, ເຫດການແທ້ຈິງ, ພ້ອມທັງຜູ້ຄົນ, ເລື່ອງລາວ ແລະ ສິ່ງຕ່າງໆທີ່ຢູ່ອ້ອມຂ້າງຕົວເຈົ້າ, ແຕ່ໃນທີ່ສຸດເຈົ້າຈະສາມາດຮູ້ຈັກພຣະເຈົ້າ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນ. ເພື່ອສະແຫວງຫາທີ່ຈະຍ່າງຕາມທາງຂອງຄົນຊອບທຳ ຫຼື ສະແຫວງຫາເພື່ອນຳເອົາພຣະທຳຂອງພຣະເຈົ້າໄປປະຕິບັດຕາມ; ນີ້ແມ່ນທາງແລ່ນ ແລະ ຈຸດໝາຍປາຍທາງແມ່ນການຮູ້ຈັກພຣະເຈົ້າ ແລະ ຖືກພຣະເຈົ້າເຮັດໃຫ້ສົມບູນ. ບໍ່ວ່າຕອນນີ້ເຈົ້າສະແຫວງຫາຄວາມສົມບູນຈາກພຣະເຈົ້າ ຫຼື ສະແຫວງຫາເພື່ອເປັນພະຍານໃຫ້ກັບພຣະເຈົ້າ, ທັງໝົດນັ້ນ, ທ້າຍທີ່ສຸດແລ້ວກໍແມ່ນເພື່ອຮູ້ຈັກພຣະເຈົ້າ; ເພື່ອວ່າພາລະກິດທີ່ພຣະອົງປະຕິບັດໃນຕົວເຈົ້າຈະບໍ່ໄຮ້ປະໂຫຍດ, ເພື່ອວ່າ ທ້າຍທີ່ສຸດແລ້ວ ເຈົ້າຈະໄດ້ມາຮູ້ຈັກຄວາມເປັນຈິງຂອງພຣະເຈົ້າ, ຮູ້ຈັກຄວາມຍິ່ງໃຫຍ່ຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ແມ່ນເພື່ອຮູ້ຈັກຄວາມອ່ອນນ້ອມຖ່ອມຕົນ ແລະ ຄວາມລີ້ລັບຂອງພຣະເຈົ້າ ແລະ ເພື່ອຮູ້ຈັກຫຼາກຫຼາຍພາລະກິດທີ່ພຣະອົງປະຕິບັດໃນຕົວເຈົ້າ. ພຣະເຈົ້າໄດ້ຖ່ອມຕົວລົງມາຢູ່ໃນລະດັບໃດໜຶ່ງ ເພື່ອປະຕິບັດພາລະກິດຂອງພຣະອົງໃນຄົນທີ່ສົກກະປົກ ແລະ ເສື່ອມຊາມເຫຼົ່ານີ້ ແລະ ເພື່ອເຮັດໃຫ້ຄົນກຸ່ມນີ້ສົມບູນ. ພຣະເຈົ້າບໍ່ໄດ້ພຽງແຕ່ກາຍເປັນເນື້ອໜັງເພື່ອໃຊ້ຊີວິດ ແລະ ກິນຢູ່ທ່າມກາງຜູ້ຄົນ, ເພື່ອນຳພາຜູ້ຄົນ ແລະ ເພື່ອສະໜອງສິ່ງທີ່ຄົນຕ້ອງການເທົ່ານັ້ນ. ສຳຄັນໄປກວ່ານັ້ນກໍຄື ພຣະອົງປະຕິບັດພາລະກິດອັນໃຫຍ່ຫຼວງແຫ່ງການລອດພົ້ນຂອງພຣະອົງ ແລະ ເອົາຊະນະຄົນເສື່ອມຊາມທີ່ເຫຼືອທົນເຫຼົ່ານີ້. ພຣະອົງໄດ້ລົງມາຢູ່ໃນຫົວໃຈຂອງມັງກອນແດງທີ່ຍິ່ງໃຫຍ່ເພື່ອຊ່ວຍຄົນເສື່ອມຊາມເຫຼົ່ານີ້ໃຫ້ລອດພົ້ນ, ເພື່ອວ່າທຸກຄົນອາດຖືກປ່ຽນແປງ ແລະ ຖືກສ້າງຂຶ້ນໃໝ່. ຄວາມຍາກລຳບາກອັນຍິ່ງໃຫຍ່ທີ່ພຣະເຈົ້າທົນທຸກນັ້ນບໍ່ແມ່ນມີແຕ່ຄວາມຍາກລຳບາກທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດທົນທຸກເທົ່ານັ້ນ, ແຕ່ແທ້ຈິງແລ້ວແມ່ນພຣະວິນຍານຂອງພຣະເຈົ້າທີ່ທົນທຸກກັບການອັບອາຍຢ່າງໜັກ, ພຣະອົງຖ່ອມຕົນ ແລະ ປິດບັງຕົວເອງຫຼາຍ ຈົນວ່າພຣະອົງກາຍມາເປັນຄົນທຳມະດາຄົນໜຶ່ງ. ພຣະເຈົ້າໄດ້ບັງເກີດເປັນມະນຸດ ແລະ ຮັບເອົາຮູບຮ່າງຂອງເນື້ອໜັງ ເພື່ອວ່າຜູ້ຄົນຈະໄດ້ເຫັນວ່າພຣະອົງມີຊີວິດແບບມະນຸດທຳມະດາຄົນໜຶ່ງ ແລະ ມີຄວາມຕ້ອງການຄືມະນຸດທົ່ວໄປ. ນີ້ແມ່ນພຽງພໍທີ່ຈະພິສູດວ່າພຣະເຈົ້າໄດ້ຖ່ອມຕົວພຣະອົງລົງຢູ່ໃນຂັ້ນໃດໜຶ່ງ. ພຣະວິນຍານຂອງພຣະເຈົ້າຖືກຮັບຮູ້ໃນເນື້ອໜັງ. ພຣະວິນຍານຂອງພຣະອົງນັ້ນສູງສົ່ງ ແລະ ຍິ່ງໃຫຍ່ຫຼາຍ, ແຕ່ພຣະອົງໃຊ້ຮູບຮ່າງຂອງມະນຸດທົ່ວໄປຄົນໜຶ່ງ ເຊິ່ງເປັນມະນຸດທີ່ບໍ່ມີຄວາມສຳຄັນຫຍັງເພື່ອປະຕິບັດພາລະກິດຂອງພຣະວິນຍານຂອງພຣະອົງ. ຄວາມສາມາດ, ຄວາມເຂົ້າໃຈຢ່າງເລິກເຊິ່ງ, ຄວາມຮູ້ສຶກ, ຄວາມເປັນມະນຸດ ແລະ ຊີວິດຂອງພວກເຈົ້າແຕ່ລະຄົນສະແດງໃຫ້ເຫັນວ່າພວກເຈົ້າບໍ່ຄູ່ຄວນແທ້ໆທີ່ຈະຮັບເອົາ

ພາລະກິດແບບນີ້ຂອງພຣະເຈົ້າ. ພວກເຈົ້າບໍ່ຄູ່ຄວນທີ່ຈະໃຫ້ພຣະເຈົ້າທົນທຸກກັບຄວາມຍາກລຳບາກເຊັ່ນນັ້ນເພື່ອພວກເຈົ້າ. ພຣະເຈົ້າຍິ່ງໃຫຍ່ຫຼາຍ. ພຣະອົງມີລິດທານຸພາບສູງສຸດ, ສ່ວນຜູ້ຄົນນັ້ນແມ່ນຕໍ່າຕ້ອຍຫຼາຍ, ແຕ່ພຣະອົງກໍຍັງປະຕິບັດພາລະກິດກັບພວກເຂົາ. ພຣະອົງບໍ່ໄດ້ບັງເກີດເປັນມະນຸດເພື່ອພຽງສະໜອງໃຫ້ແກ່ຜູ້ຄົນ, ເພື່ອກ່າວກັບຜູ້ຄົນເທົ່ານັ້ນ, ແຕ່ພຣະອົງຍັງດຳລົງຊີວິດຢູ່ຮ່ວມກັນກັບຜູ້ຄົນອີກດ້ວຍ. ພຣະເຈົ້າຖ່ອມຕົວຫຼາຍ, ໜ້າຮັກຫຼາຍ. ຖ້າທັນທີໃດທີ່ມີການກ່າວເຖິງຄວາມຮັກຂອງພຣະເຈົ້າ, ທັນທີໃດທີ່ມີການກ່າວເຖິງພຣະຄຸນຂອງພຣະເຈົ້າ, ເຈົ້າກໍຫຼັ່ງນໍ້າຕາເມື່ອເວລາເຈົ້າເອີ່ຍຄຳສັນລະເສີນທີ່ຍິ່ງໃຫຍ່, ຖ້າເຈົ້າມາເຖິງຂັ້ນນີ້, ເຈົ້າແມ່ນມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າແລ້ວ.

ໃນປັດຈຸບັນ ມີການບ່ຽງເບນໃນການສະແຫວງຫາຂອງຜູ້ຄົນ; ພວກເຂົາພຽງສະແຫວງຫາທີ່ຈະຮັກພຣະເຈົ້າ ແລະ ເຮັດໃຫ້ພຣະອົງພໍໃຈເທົ່ານັ້ນ, ແຕ່ພວກເຂົາບໍ່ມີຄວາມຮູ້ໃດໆກ່ຽວກັບພຣະອົງ ແລະ ໄດ້ລະເລີຍຕໍ່ການສ່ອງແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດໃນຕົວພວກເຂົາ. ພວກເຂົາບໍ່ມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າເປັນຮາກຖານ. ໃນວິທີນີ້ ພວກເຂົາຈະສູນເສຍກຳລັງໃຈ ເມື່ອປະສົບການຂອງພວກເຂົາກ້າວໜ້າຂຶ້ນ. ທຸກຄົນທີ່ສະແຫວງຫາເພື່ອມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າ, ເຖິງແມ່ນວ່າ ພວກເຂົາບໍ່ໄດ້ຢູ່ໃນສະພາບທີ່ດີໃນອະດີດ ແລະ ມັກຈະມີຄວາມຄິດລົບ ແລະ ຄວາມອ່ອນແອ ແລະ ມັກຫຼັ່ງນໍ້າຕາຢູ່ເລື້ອຍໆ, ຮູ້ສຶກທໍ້ແທ້ ແລະ ຜິດຫວັງ; ຕອນນີ້ຄົນເຫຼົ່ານີ້ໄດ້ມີປະສົບການຫຼາຍຂຶ້ນ, ສະຖານະພາບຂອງພວກເຂົາກໍດີຂຶ້ນ. ຫຼັງຈາກປະສົບການແຫ່ງການຖືກຈັດການ, ຖືກເຮັດໃຫ້ແຕກຫັກ ແລະ ໄດ້ຜ່ານຂັ້ນຕອນການທົດລອງ ແລະ ການຫຼໍ່ຫຼອມ, ພວກເຂົາໄດ້ກ້າວໜ້າຢ່າງໃຫຍ່. ສະຖານະພາບທີ່ເປັນລົບກໍຫຼຸດລົງ ແລະ ອຸປະນິໄສຂອງພວກເຂົາກໍໄດ້ຖືກປ່ຽນແປງ. ໃນຂະນະທີ່ພວກເຂົາຜະເຊີນກັບການທົດລອງຫຼາຍຂຶ້ນ, ຫົວໃຈຂອງພວກເຂົາກໍເລີ່ມຮັກພຣະເຈົ້າ. ມີກົດສຳລັບການທີ່ພຣະເຈົ້າເຮັດໃຫ້ຜູ້ຄົນສົມບູນ, ເຊິ່ງພຣະອົງສ່ອງແສງສະຫວ່າງເຈົ້າໂດຍໃຊ້ພາກສ່ວນທີ່ເໝາະສົມຂອງເຈົ້າ ເພື່ອວ່າເຈົ້າຈະມີເສັ້ນທາງປະຕິບັດ ແລະ ສາມາດແຍກຕົວເຈົ້າເອງອອກຈາກສະຖານະພາບດ້ານລົບທັງໝົດ, ຊ່ວຍວິນຍານຂອງເຈົ້າໃຫ້ໄດ້ຮັບການປົດປ່ອຍ ແລະ ເຮັດໃຫ້ເຈົ້າສາມາດຮັກພຣະອົງຫຼາຍຂຶ້ນ. ດ້ວຍວິທີນີ້ ເຈົ້າຈຶ່ງຈະສາມາດໂຍນອຸປະນິໄສອັນເສື່ອມຊາມຂອງຊາຕານນັ້ນຖິ້ມໄດ້. ເຈົ້າເປັນຄົນຊື່ ແລະ ເປີດເຜີຍ, ເຕັມໃຈທີ່ຈະຮູ້ຈັກຕົວເອງ ແລະ ເຕັມໃຈທີ່ຈະເອົາຄວາມຈິງໄປປະຕິບັດຕາມ. ແນ່ນອນ ພຣະເຈົ້າຈະອວຍພອນເຈົ້າ, ດັ່ງນັ້ນ ເມື່ອເຈົ້າອ່ອນແອ ແລະ ທໍ້ຖອຍ, ພຣະອົງກໍຈະສ່ອງແສງສະຫວ່າງໃຫ້ກັບເຈົ້າເປັນສອງເທົ່າ, ຊ່ວຍເຈົ້າໃຫ້ຮູ້ຈັກຕົວເຈົ້າເອງຫຼາຍຂຶ້ນ, ເຕັມໃຈທີ່ຈະກັບໃຈສຳລັບຕົວເອງຫຼາຍຂຶ້ນ ແລະ ສາມາດປະຕິບັດສິ່ງທີ່ເຈົ້າຄວນປະຕິບັດໄດ້ຫຼາຍຂຶ້ນ. ມີພຽງວິທີນີ້ເທົ່ານັ້ນຫົວໃຈຂອງເຈົ້າຈຶ່ງຈະມີຄວາມສະຫງົບ ແລະ ສະບາຍໃຈ. ຄົນທີ່ໃຫ້ຄວາມສົນໃຈກັບການຮູ້ຈັກພຣະເຈົ້າເປັນປົກກະຕິ, ຜູ້ທີ່ໃຫ້ຄວາມສົນໃຈກັບການຮູ້ຈັກຕົນເອງ, ຜູ້ທີ່ໃຫ້ຄວາມສົນໃຈໃນການປະຕິບັດຂອງຕົນເອງຈະສາມາດໄດ້ຮັບພາລະກິດຂອງພຣະເຈົ້າຢູ່ເລື້ອຍໆ ພ້ອມທັງໄດ້ຮັບການນຳພາ ແລະ ການສ່ອງແສງສະຫວ່າງຈາກພຣະເຈົ້າ. ເຖິງແມ່ນວ່າຜູ້ຄົນດັ່ງກ່າວຈະຢູ່ໃນສະຖານະພາບດ້ານລົບ, ເຂົາກໍຈະສາມາດຫັນປ່ຽນສິ່ງຕ່າງໆທັນທີ, ບໍ່ວ່າຈະເກີດຈາກ

ການກະທຳດ້ວຍຈິດສຳນຶກ ຫຼື ເກີດຈາກການສ່ອງແສງສະຫວ່າງຈາກພຣະທຳຂອງພຣະເຈົ້າ. ການປ່ຽນແປງອຸປະນິໄສຂອງຄົນໃດໜຶ່ງຈະບັນລຸຜົນສະເໝີເມື່ອເຂົາຮູ້ສະຖານະພາບເປັນຈິງຂອງຕົວເອງ ແລະ ອຸປະນິໄສ ແລະ ພາລະກິດຂອງພຣະເຈົ້າ. ຄົນທີ່ເຕັມໃຈທີ່ຈະຮູ້ຈັກຕົວເອງ ແລະ ເປີດເຜີຍຕົວເອງຈະສາມາດປະຕິບັດຕາມຄວາມຈິງໄດ້. ຄົນແບບນີ້ແມ່ນຄົນທີ່ຈິງຮັກພັກດີຕໍ່ພຣະເຈົ້າ ແລະ ຄົນທີ່ຈິງຮັກພັກດີຕໍ່ພຣະເຈົ້າມີຄວາມເຂົ້າໃຈກ່ຽວກັບພຣະເຈົ້າ, ບໍ່ວ່າຄວາມເຂົ້າໃຈນີ້ຈະເລິກ ຫຼື ຕື້ນ, ໜ້ອຍ ຫຼື ຫຼາຍກໍຕາມ. ນີ້ແມ່ນຄວາມຊອບທຳຂອງພຣະເຈົ້າ ແລະ ແມ່ນບາງສິ່ງທີ່ຜູ້ຄົນບັນລຸຜົນ, ມັນແມ່ນຜົນປະໂຫຍດຂອງພວກເຂົາເອງ. ຄົນທີ່ມີຄວາມຮູ້ກ່ຽວກັບພຣະເຈົ້າແມ່ນຄົນທີ່ມີພື້ນຖານ, ເປັນຄົນທີ່ມີວິໄສທັດ. ຄົນແບບນີ້ແມ່ນໝັ້ນໃຈກ່ຽວກັບເນື້ອໜັງຂອງພຣະເຈົ້າ ແລະ ໝັ້ນໃຈກ່ຽວກັບພຣະທຳ ແລະ ພາລະກິດຂອງພຣະເຈົ້າ. ບໍວ່າພຣະເຈົ້າຈະປະຕິບັດ ຫຼື ກ່າວແນວໃດກໍຕາມ ຫຼື ຄົນອື່ນໆຈະລົບກວນພຽງໃດກໍຕາມ, ເຂົາກໍສາມາດຍຶດໝັ້ນ ແລະ ຢືນຢັນເປັນພະຍານໃຫ້ກັບພຣະເຈົ້າໄດ້. ຍິ່ງຜູ້ຄົນປະຕິບັດແບບນີ້ຫຼາຍເທົ່າໃດ ເຂົາກໍຍິ່ງສາມາດປະຕິບັດຕາມຄວາມຈິງທີ່ເຂົາເຂົ້າໃຈໄດ້ຫຼາຍຂຶ້ນເທົ່ານັ້ນ. ຍ້ອນວ່າເຂົາປະຕິບັດຕາມພຣະທຳຂອງພຣະເຈົ້າຢູ່ສະເໝີ, ເຂົາໄດ້ຮັບຄວາມເຂົ້າໃຈກ່ຽວກັບພຣະເຈົ້າຫຼາຍຂຶ້ນ ແລະ ມີຄວາມເດັດດ່ຽວທີ່ຈະເປັນພະຍານໃຫ້ກັບພຣະເຈົ້າຕະຫຼອດໄປ.

ການມີຄວາມຮູ້ແຈ້ງ, ມີຄວາມອ່ອນນ້ອມ ແລະ ມີຄວາມສາມາດເຫັນສິ່ງຕ່າງໆ ເພື່ອວ່າເຈົ້າຈະມີຄວາມກະຕືລືລົ້ນໃນວິນຍານ ໝາຍຄວາມວ່າເຈົ້າມີພຣະທຳຂອງພຣະເຈົ້າເຍືອງທາງ ແລະ ສ່ອງແສງສະຫວ່າງເຈົ້າຢູ່ທາງໃນທັນທີທີ່ເຈົ້າພະເຊີນກັບສິ່ງໃດໜຶ່ງ. ນີ້ແມ່ນການມີຄວາມກະຕືລືລົ້ນໃນວິນຍານ. ທຸກສິ່ງທີ່ພຣະເຈົ້າປະຕິບັດແມ່ນເພື່ອຊ່ວຍຟື້ນຟູວິນຍານຂອງຄົນ. ເປັນຫຍັງພຣະເຈົ້າຈຶ່ງເວົ້າຢູ່ສະເໝີວ່າຄົນໄຮ້ຄວາມຮູ້ສຶກ ແລະ ໂງ່ຈ້າ? ກໍຍ້ອນວ່າວິນຍານຂອງຄົນໄດ້ຕາຍໄປແລ້ວ ແລະ ພວກເຂົາບໍ່ມີຄວາມຮູ້ສຶກຈົນເຖິງຂັ້ນວ່າພວກເຂົາບໍ່ຮູ້ສຶກເຖິງສິ່ງຕ່າງໆຂອງວິນຍານ. ພາລະກິດຂອງພຣະເຈົ້າແມ່ນການເຮັດໃຫ້ຊີວິດຂອງຄົນກ້າວໜ້າ ແລະ ເພື່ອຊ່ວຍໃຫ້ວິນຍານຂອງຄົນກັບມາມີຊີວິດ, ເພື່ອວ່າພວກເຂົາຈະສາມາດເຫັນໃນສິ່ງຕ່າງໆຂອງວິນຍານ ແລະ ພວກເຂົາຈະສາມາດຮັກພຣະເຈົ້າຢູ່ໃນຫົວໃຈຂອງພວກເຂົາ ແລະ ເຮັດໃຫ້ພຣະເຈົ້າພໍໃຈຢູ່ສະເໝີ. ການມາເຖິງຈຸດນີ້ ສະແດງໃຫ້ເຫັນວ່າວິນຍານຂອງຄົນໄດ້ຖືກຟື້ນຟູແລ້ວ ແລະ ເທື່ອໜ້າເມື່ອເຂົາພະເຊີນກັບບາງສິ່ງ, ເຂົາກໍຈະສາມາດຕອບສະໜອງໄດ້ທັນທີ. ເຂົາຕອບສະໜອງຕໍ່ຄຳເທດສະໜາ ແລະ ຕອບສະໜອງກັບສະຖານະການຕ່າງໆໄດ້ໂດຍໄວ. ນີ້ແມ່ນສິ່ງທີ່ຄວາມກະຕືລືລົ້ນຂອງວິນຍານບັນລຸ. ມີຫຼາຍຄົນທີ່ມີປະຕິກິລິຍາໂດຍໄວຕໍ່ເຫດການທາງນອກ, ແຕ່ທັນທີເມື່ອເຂົ້າສູ່ຄວາມເປັນຈິງ ຫຼື ເມື່ອກ່າວເຖິງສິ່ງຕ່າງໆຢ່າງລາຍລະອຽດໃນວິນຍານ, ພວກເຂົາກໍກາຍເປັນຄົນຂາດຄວາມຮູ້ສຶກ ແລະ ໂງ່ຈ້າ. ພວກເຂົາເຂົ້າໃຈບາງສິ່ງກໍຍ້ອນວ່າມັນຈ້ອງເບິ່ງພວກເຂົາຢູ່ຕໍ່ໜ້າເທົ່ານັ້ນ. ທັງໝົດນີ້ແມ່ນສັນຍານຂອງຄວາມມືນຊາ ແລະ ຄວາມໂງ່ຈ້າທາງດ້ານວິນຍານ ແລະ ການມີປະສົບການພຽງໜ້ອຍດຽວກ່ຽວກັບສິ່ງຕ່າງໆຝ່າຍວິນຍານ. ບາງຄົນມີຄວາມກະຕືລືລົ້ນທາງວິນຍານ ແລະ ມີຄວາມເຫັນແຈ້ງ. ທັນທີທີ່ພວກເຂົາໄດ້ຍິນບາງສິ່ງທີ່ຊີ້ເຖິງສະຖານະພາບຂອງພວກເຂົາ ພວກເຂົາບໍ່ເສຍເວລາທີ່ຈະບັນທຶກມັນໄວ້. ຫຼັງຈາກທີ່

ພວກເຂົາໄດ້ຍິນຖ້ອຍຄຳກ່ຽວກັບຫຼັກການ ແລະ ການປະຕິບັດ, ພວກເຂົາກໍສາມາດຮັບເອົາມັນ ແລະ ນຳໃຊ້ມັນກັບປະສົບການຕໍ່ໄປຂອງພວກເຂົາ, ເພື່ອປ່ຽນແປງຕົວພວກເຂົາເອງ. ນີ້ແມ່ນຄົນທີ່ມີຄວາມກະຕືລືລົ້ນໃນວິນຍານ. ເປັນຫຍັງເຂົາຈຶ່ງສາມາດມີປະຕິກິລິຍາຕອບໂຕ້ໄດ້ໄວຂະໜາດນີ້? ກໍຍ້ອນວ່າເຂົາເນັ້ນໃສ່ສິ່ງຕ່າງໆເຫຼົ່ານີ້ໃນຊີວິດປະຈຳວັນ. ເມື່ອພວກເຂົາອ່ານພຣະທຳຂອງພຣະເຈົ້າ, ພວກເຂົາກໍສາມາດກວດສອບສະພາບຂອງພວກເຂົາໃສ່ພຣະທຳເຫຼົ່ານັ້ນ ແລະ ທຽບທວນກັບຕົນເອງ. ເມື່ອພວກເຂົາໄດ້ຍິນການສົນທະນາ ແລະ ຄຳເທດສະໜາ ແລະ ໄດ້ຍິນພຣະທຳທີ່ນຳແສງສະຫວ່າງ ແລະ ແສງເຍືອງທາງມາສູ່ພວກເຂົາ, ພວກເຂົາກໍສາມາດຮັບເອົາສິ່ງເຫຼົ່ານັ້ນທັນທີ. ມັນຄ້າຍຄືກັບການໃຫ້ອາຫານໃຫ້ແກ່ຄົນທີ່ຫິວເຂົ້າ; ພວກເຂົາສາມາດກິນໄດ້ທັນທີ. ຖ້າເຈົ້າໃຫ້ອາຫານແກ່ບາງຄົນທີ່ບໍ່ຫິວເຂົ້າ, ພວກເຂົາກໍຈະບໍ່ຕອບສະໜອງໂດຍໄວ. ເຈົ້າອະທິຖານຫາພຣະເຈົ້າເລື້ອຍໆ ແລະ ເຈົ້າກໍສາມາດຕອບສະໜອງໄດ້ທັນທີເມື່ອເຈົ້າພະເຊີນກັບບາງສິ່ງ: ພຣະເຈົ້າຮຽກຮ້ອງຫຍັງໃນເລື່ອງນີ້ ແລະ ເຈົ້າຄວນປະຕິບັດແນວໃດ. ພຣະເຈົ້າໄດ້ນຳທາງເຈົ້າໃນເລື່ອງນີ້ມາຄັ້ງໜຶ່ງແລ້ວ ແລະ ມື້ນີ້ເມື່ອເຈົ້າພະເຊີນກັບສິ່ງດຽວກັນນີ້, ໂດຍທຳມະຊາດແລ້ວ ເຈົ້າກໍຈະຮູ້ວິທີປະຕິບັດໃນທາງທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ. ຖ້າເຈົ້າປະຕິບັດໃນທາງນີ້ຢູ່ສະເໝີ ແລະ ປະສົບໃນທາງນີ້ຢູ່ສະເໝີ, ມີມື້ໜຶ່ງ ມັນກໍຈະມາຫາເຈົ້າຢ່າງງ່າຍດາຍ. ເມື່ອອ່ານພຣະທຳຂອງພຣະເຈົ້າ, ເຈົ້າຮູ້ວ່າຄົນແບບໃດທີ່ພຣະເຈົ້າກ່າວເຖິງ, ເຈົ້າຮູ້ວ່າສະພາບແບບໃດຂອງວິນຍານທີ່ພຣະອົງເວົ້າເຖິງ ແລະ ເຈົ້າກໍຈະສາມາດກຳຈຸດສຳຄັນນີ້ໄດ້ ແລະ ນຳເອົາໄປປະຕິບັດຕາມ; ນີ້ສະແດງໃຫ້ເຫັນວ່າເຈົ້າສາມາດພະເຊີນໄດ້. ເປັນຫຍັງບາງຄົນຈຶ່ງຂາດໃນດ້ານນີ້? ກໍຍ້ອນວ່າພວກເຂົາບໍ່ໄດ້ໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍເຂົ້າໃນພາກປະຕິບັດ. ເຖິງແມ່ນວ່າພວກເຂົາເຕັມໃຈທີ່ຈະນຳເອົາຄວາມຈິງໄປປະຕິບັດຕາມ, ແຕ່ພວກເຂົາກໍບໍ່ມີຄວາມເຂົ້າໃຈຢ່າງແທ້ຈິງໃນລາຍລະອຽດຂອງການຮັບໃຊ້ ແລະ ໃນລາຍລະອຽດຂອງຄວາມຈິງໃນຊີວິດຂອງພວກເຂົາ. ພວກເຂົາສັບສົນເມື່ອບາງສິ່ງເກີດຂຶ້ນ. ໃນວິທີນີ້, ເຈົ້າອາດຖືກນຳພາໃຫ້ຫຼົງທາງເມື່ອມີຜູ້ເຜີຍພຣະທຳທຽມ ຫຼື ສາວົກປອມມານຳ. ເຈົ້າຕ້ອງສົນທະນາເລື້ອຍໆກ່ຽວກັບພຣະທຳ ແລະ ພາລະກິດຂອງພຣະເຈົ້າ, ດ້ວຍວິທີນີ້ເທົ່ານັ້ນເຈົ້າຈຶ່ງຈະສາມາດເຂົ້າໃຈຄວາມຈິງ ແລະ ມີຄວາມເຫັນແຈ້ງ. ຖ້າເຈົ້າບໍ່ເຂົ້າໃຈຄວາມຈິງ, ເຈົ້າຈະບໍ່ມີຄວາມເຫັນແຈ້ງ. ຍົກຕົວຢ່າງ: ສິ່ງທີ່ພຣະເຈົ້າກ່າວ, ວິທີທີ່ພຣະເຈົ້າກ່າວ, ສິ່ງທີ່ພຣະອົງຕ້ອງການຈາກຜູ້ຄົນ, ຄົນປະເພດໃດທີ່ເຈົ້າຄວນຄົບຄ້າສະມາຄົມນຳ ແລະ ຄົນປະເພດໃດທີ່ເຈົ້າຄວນປະຕິເສດ. ເຈົ້າຕ້ອງສົນທະນາກ່ຽວກັບສິ່ງເຫຼົ່ານີ້ຢູ່ເລື້ອຍໆ. ຖ້າເຈົ້າປະສົມກັບພຣະທຳຂອງພຣະເຈົ້າໃນທາງນີ້ຢູ່ສະເໝີ, ເຈົ້າຈະເຂົ້າໃຈ ແລະ ເຂົ້າໃຈຫຼາຍສິ່ງຢ່າງລະອຽດ ແລະ ເຈົ້າຍັງຈະມີຄວາມເຫັນແຈ້ງອີກດ້ວຍ. ແມ່ນຫຍັງຄືວິໄນຂອງພຣະວິນຍານບໍລິສຸດ, ແມ່ນຫຍັງຄືໂທດກຳເນີດຈາກຄວາມປະສົງຂອງມະນຸດ, ແມ່ນຫຍັງຄືການນຳພາຈາກພຣະວິນຍານບໍລິສຸດ, ແມ່ນຫຍັງຄືການຈັດແຈງສະພາບແວດລ້ອມ, ແມ່ນຫຍັງຄືການສ່ອງແສງສະຫວ່າງພາຍໃນພຣະທຳຂອງພຣະເຈົ້າ, ຖ້າເຈົ້າບໍ່ຈະແຈ້ງກ່ຽວກັບສິ່ງເຫຼົ່ານີ້, ເຈົ້າກໍຈະບໍ່ມີຄວາມຮູ້ແຈ້ງ. ເຈົ້າຄວນຮູ້ວ່າແມ່ນຫຍັງທີ່ມາຈາກພຣະວິນຍານບໍລິດສຸດ, ແມ່ນຫຍັງຄືອຸປະນິໄສກະບົດ, ວິທີເຊື່ອຟັງພຣະທຳຂອງພຣະເຈົ້າ ແລະ ວິທີ

ໂຍນຄວາມກະບົດຂອງຕົວເຈົ້າເອງຖິ້ມ; ຖ້າເຈົ້າມີຄວາມເຂົ້າໃຈຢ່າງແທ້ຈິງໃນສິ່ງເຫຼົ່ານີ້, ເຈົ້າກໍຈະມີພື້ນຖານ; ເມື່ອບາງສິ່ງເກີດຂຶ້ນ, ເຈົ້າຈະມີຄວາມຈິງທີ່ເໝາະສົມເພື່ອປຽບທຽບກັບມັນໄດ້ ແລະ ວິໄສທັດທີ່ເໝາະສົມເປັນພື້ນຖານ. ເຈົ້າຈະມີຫຼັກການໃນທຸກສິ່ງທີ່ເຈົ້າປະຕິບັດ ແລະ ຈະສາມາດປະຕິບັດຕາມຄວາມຈິງ. ແລ້ວຊີວິດຂອງເຈົ້າກໍຈະເຕັມໄປດ້ວຍແສງສະຫວ່າງຂອງພຣະເຈົ້າ, ເຕັມໄປດ້ວຍພອນຂອງພຣະເຈົ້າ. ພຣະເຈົ້າຈະບໍ່ປະຕິບັດບໍ່ດີຕໍ່ຄົນທີ່ສະແຫວງຫາພຣະອົງດ້ວຍໃຈຈິງ. ພຣະເຈົ້າຈະບໍ່ປະຕິບັດຢ່າງບໍ່ຍຸຕິທຳຕໍ່ຄົນທີ່ສະແຫວງຫາພຣະອົງຢ່າງຈິງໃຈ ຫຼື ຜູ້ທີ່ດຳລົງຊີວິດຕາມພຣະອົງ ແລະ ເປັນພະຍານໃຫ້ກັບພຣະອົງ ແລະ ພຣະອົງຈະບໍ່ສາບແຊ່ງຄົນທີ່ສາມາດກະຫາຍຫາຄວາມຈິງຢ່າງຈິງໃຈ. ຖ້າໃນຂະນະທີ່ເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າສາມາດເອົາໃຈໃສ່ໃນການຮູ້ຈັກສະພາບຕົວຈິງຂອງຕົວເຈົ້າເອງ, ເອົາໃຈໃສ່ຕໍ່ການປະຕິບັດຂອງຕົວເຈົ້າເອງ ແລະ ເອົາໃຈໃສ່ຕໍ່ຄວາມເຂົ້າໃຈຂອງຕົນເອງ, ແລ້ວ ເມື່ອເຈົ້າພົບກັບບັນຫາ, ເຈົ້າຈະໄດ້ຮັບແສງສະຫວ່າງ ແລະ ຈະໄດ້ຮັບຄວາມເຂົ້າໃຈທີ່ແທ້ຈິງ. ເຈົ້າຈະມີເສັ້ນທາງແຫ່ງການປະຕິບັດ ແລະ ໄດ້ຮັບຄວາມຮູ້ແຈ້ງສຳລັບທຸກສິ່ງ. ຄົນທີ່ມີຄວາມຈິງບໍ່ໜ້າເປັນໄປໄດ້ທີ່ຈະຖືກຫຼອກລວງ ແລະ ບໍ່ໜ້າເປັນໄປໄດ້ທີ່ຈະປະພຶດຕົນແບບບໍ່ເໝາະສົມ ຫຼື ປະຕິບັດແບບເກີນຄວນ. ຍ້ອນຄວາມຈິງເຂົາຈຶ່ງຖືກປົກປ້ອງ ແລະ ຍ້ອນຄວາມຈິງເຂົາຈຶ່ງໄດ້ຮັບຄວາມເຂົ້າໃຈຫຼາຍຂຶ້ນ. ຍ້ອນຄວາມຈິງເຂົາຈຶ່ງມີເສັ້ນທາງປະຕິບັດຫຼາຍຂຶ້ນ, ມີໂອກາດໃຫ້ພຣະວິນຍານບໍລິສຸດປະຕິບັດພາລະກິດໃນຕົວເຂົາຫຼາຍຂຶ້ນ ແລະ ມີໂອກາດທີ່ຈະຖືກເຮັດໃຫ້ສົມບູນຫຼາຍຂຶ້ນ.

# ພາລະກິດຂອງພຣະວິນຍານບໍລິສຸດ ແລະ ພາລະກິດຂອງຊາຕານ

ຄົນໆໜຶ່ງຈະມາເຂົ້າກ່ຽວກັບລາຍລະອຽດຂອງວິນຍານໄດ້ແນວໃດ? ພຣະວິນຍານບໍລິສຸດປະຕິບັດພາລະກິດໃນມະນຸດແນວໃດ? ຊາຕານປະຕິບັດພາລະກິດໃນມະນຸດແນວໃດ? ວິນຍານຊົ່ວຮ້າຍປະຕິບັດພາລະກິດໃນມະນຸດແນວໃດ? ແລະ ແມ່ນຫຍັງຄືການສະແດງອອກ? ເມື່ອມີບາງສິ່ງເກີດຂຶ້ນກັບເຈົ້າ ສິ່ງນັ້ນມາຈາກພຣະວິນຍານບໍລິສຸດບໍ ແລະ ເຈົ້າຄວນເຊື່ອຟັງມັນບໍ ຫຼື ປະຕິເສດມັນ? ໃນການປະຕິບັດຕົວຈິງຂອງຜູ້ຄົນ, ຫຼາຍຢ່າງໄດ້ເກີດຂຶ້ນຈາກຄວາມປະສົງຂອງມະນຸດ ຈົນຜູ້ຄົນເຊື່ອຢູ່ຕະຫຼອດວ່າມາຈາກພຣະວິນຍານບໍລິສຸດ. ບາງຢ່າງມາຈາກວິນຍານຊົ່ວຮ້າຍ ແຕ່ມະນຸດຍັງຄິດວ່າພວກມັນມາຈາກພຣະວິນຍານບໍລິສຸດ ແລະ ບາງເທື່ອ ພຣະວິນຍານບໍລິສຸດນຳພາມະນຸດຈາກພາຍໃນ ແຕ່ຜູ້ຄົນຢ້ານວ່າ ການນຳພາດັ່ງກ່າວແມ່ນມາຈາກຊາຕານ ແລະ ບໍ່ກ້າທີ່ຈະເຊື່ອຟັງ ເຊິ່ງໃນຄວາມເປັນຈິງແລ້ວ ການນຳພານັ້ນແມ່ນຄວາມສະຫວ່າງຂອງພຣະວິນຍານບໍລິສຸດ. ດ້ວຍເຫດນັ້ນ ນອກຈາກຄົນໆໜຶ່ງນຳໃຊ້ການແຍກແຍະ, ແລ້ວກໍບໍ່ມີທາງທີ່ຈະໄດ້ຮັບປະສົບການຕົວຈິງຂອງຄົນໆນັ້ນ; ຫາກປາສະຈາກການແຍກແຍະ, ກໍບໍ່ມີທາງທີ່ຈະໄດ້ຮັບຊີວິດ. ພຣະວິນຍານບໍລິສຸດປະຕິບັດພາລະກິດແນວໃດ? ວິນຍານຊົ່ວຮ້າຍປະຕິບັດພາລະກິດແນວໃດ? ແມ່ນຫຍັງມາຈາກຄວາມປະສົງຂອງມະນຸດ? ແລ້ວແມ່ນຫຍັງເກີດຈາກການນຳພາ ແລະ ຄວາມສະຫວ່າງຂອງພຣະວິນຍານບໍລິສຸດ? ຖ້າເຈົ້າເຂົ້າໃຈເຖິງຮູບແບບພາລະກິດຂອງພຣະວິນຍານບໍລິສຸດພາຍໃນມະນຸດ, ແລ້ວໃນຊີວິດປະຈຳວັນຂອງເຈົ້າ ແລະ ໃນລະຫວ່າງປະສົບການຕົວຈິງຂອງເຈົ້າ ເຈົ້າຈະສາມາດພັດທະນາຄວາມຮູ້ຂອງເຈົ້າ ແລະ ແຍກແຍະໄດ້; ເຈົ້າຈະມາຮູ້ຈັກພຣະເຈົ້າ, ເຈົ້າຈະສາມາດເຂົ້າໃຈ ແລະ ເບິ່ງຊາຕານອອກ; ເຈົ້າຈະບໍ່ສັບສົນໃນການເຊື່ອຟັງ ຫຼື ການສະແຫວງຫາຂອງເຈົ້າ ແລະ ເຈົ້າຈະກາຍເປັນຄົນທີ່ມີຄວາມຄິດທີ່ແຈ່ມແຈ້ງ, ເປັນຄົນທີ່ເຊື່ອຟັງພາລະກິດຂອງພຣະວິນຍານບໍລິສຸດ.

ພາລະກິດຂອງພຣະວິນຍານບໍລິສຸດແມ່ນຢູ່ໃນຮູບແບບຂອງການນຳພາຢ່າງຫ້າວຫັນ ແລະ ຄວາມສະຫວ່າງໃນທາງທີ່ດີ. ມັນບໍ່ອະນຸຍາດໃຫ້ຜູ້ຄົນຢູ່ຊື່ໆ. ພາລະກິດດັ່ງກ່າວນຳສິ່ງປອບໃຈມາສູ່ພວກເຂົາ, ມອບຄວາມເຊື່ອ ແລະ ການຕັດສິນໃຈໃຫ້ກັບພວກເຂົາ ແລະ ເຮັດໃຫ້ພວກເຂົາສາມາດສະແຫວງຫາການຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດ, ຜູ້ຄົນກໍສາມາດເຂົ້າຫາຢ່າງຂະຫຍັນຂັນແຂງ; ພວກເຂົາບໍ່ຢູ່ຊື່ໆ ຫຼື ຖືກບັງຄັບ, ແຕ່ປະພຶດຕາມການລິເລີ່ມຂອງພວກເຂົາເອງ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດ, ຜູ້ຄົນກໍຍິນດີ ແລະ ເຕັມໃຈ, ເຕັມໃຈທີ່ຈະເຊື່ອຟັງ ແລະ ຍິນດີຖ່ອມຕົວພວກເຂົາເອງ. ເຖິງແມ່ນວ່າ ພວກເຂົາເຈັບປວດ ແລະ ອ່ອນແອຂ້າງໃນ, ພວກເຂົາມີຄວາມຕັ້ງໃຈທີ່ຈະຮ່ວມມື; ພວກເຂົາອົດທົນດ້ວຍຄວາມຍິນດີ, ພວກເຂົາສາມາດເຊື່ອຟັງ ແລະ ພວກເຂົາບໍ່ມີມົນທິນຈາກຄວາມປະສົງຂອງມະນຸດ, ບໍ່ມີມົນທິນຈາກຄວາມຄິດຂອງມະນຸດ ແລະ ພວກເຂົາບໍ່ມີມົນທິນຈາກຄວາມປາຖະໜາ ແລະ ແຮງບັນດານໃຈຂອງມະນຸດ

ຢ່າງແນ່ນອນ. ເມື່ອມະນຸດມີປະສົບການກັບພາລະກິດຂອງພຣະວິນຍານບໍລິສຸດ, ພວກເຂົາກໍບໍລິສຸດຢູ່ພາຍໃນເປັນພິເສດ. ຄົນທີ່ຢູ່ມີພາລະກິດຂອງພຣະວິນຍານບໍລິສຸດກໍດຳລົງຊີວິດດ້ວຍຄວາມຮັກສຳລັບພຣະເຈົ້າ ແລະ ຄວາມຮັກຂອງອ້າຍເອື້ອຍນ້ອງຂອງພວກເຂົາ; ພວກເຂົາຊື່ນຊົມໃນສິ່ງທີ່ພຣະເຈົ້າຊື່ນຊົມ ແລະ ກຽດຊັງສິ່ງທີ່ພຣະເຈົ້າກຽດຊັງ. ຄົນທີ່ຖືກສຳຜັດໂດຍພາລະກິດຂອງພຣະວິນຍານບໍລິສຸດມີຄວາມເປັນມະນຸດທີ່ທຳມະດາ ແລະ ພວກເຂົາສະແຫວງຫາຄວາມຈິງຢ່າງຕໍ່ເນື່ອງ ແລະ ມີຄວາມເປັນມະນຸດ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດພາຍໃນມະນຸດ, ສະພາບການຂອງພວກເຂົາກໍເປັນປົກກະຕິຂຶ້ນຢ່າງຕໍ່ເນື່ອງ ແລະ ຄວາມເປັນມະນຸດຂອງພວກເຂົາກໍຍິ່ງເປັນປົກກະຕິຫຼາຍຂຶ້ນເລື້ອຍໆ, ແລະ ເຖິງແມ່ນວ່າ ການຮ່ວມມືບາງຢ່າງຂອງພວກເຂົາອາດໂງ່ຈ້າ, ແຮງບັນດານໃຈຂອງພວກເຂົາກໍຖືກຕ້ອງ, ການເຂົ້າຫາຂອງພວກເຂົາກໍເປັນໄປໃນທາງທີ່ດີ, ພວກເຂົາບໍ່ພະຍາຍາມຂັດຂວາງ ແລະ ບໍ່ມີຄວາມຄິດຮ້າຍພາຍໃນພວກເຂົາ. ພາລະກິດຂອງພຣະວິນຍານບໍລິສຸດແມ່ນທຳມະດາ ແລະ ເປັນຈິງ, ພຣະວິນຍານບໍລິສຸດປະຕິບັດພາລະກິດໃນມະນຸດໂດຍອີງຕາມກົດລະບຽບຂອງຊີວິດທຳມະດາຂອງມະນຸດ ແລະ ພຣະອົງປະຕິບັດການສ່ອງແສງສະຫວ່າງ ແລະ ການນຳພາພາຍໃນຜູ້ຄົນໂດຍອີງຕາມການສະແຫວງຫາທີ່ແທ້ຈິງຂອງມະນຸດປົກກະຕິ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດໃນຜູ້ຄົນ, ພຣະອົງນຳພາ ແລະ ໃຫ້ຄວາມສະຫວ່າງກັບພວກເຂົາໂດຍອີງຕາມຄວາມຕ້ອງການຂອງມະນຸດປົກກະຕິ. ພຣະອົງສະໜອງໃຫ້ກັບພວກເຂົາໂດຍອີງຕາມຄວາມຕ້ອງການຂອງພວກເຂົາ ແລະ ພຣະອົງນຳພາ ແລະ ໃຫ້ຄວາມສະຫວ່າງກັບພວກເຂົາໄປໃນທາງທີ່ດີ ໂດຍອີງຕາມສິ່ງທີ່ພວກເຂົາຂາດ ແລະ ຕາມຄວາມບົກຜ່ອງຂອງພວກເຂົາ. ພາລະກິດຂອງພຣະວິນຍານບໍລິສຸດແມ່ນເພື່ອສ່ອງແສງສະຫວ່າງ ແລະ ນຳພາຜູ້ຄົນໃນຊີວິດທີ່ເປັນຈິງ; ມີພຽງແຕ່ຖ້າພວກເຂົາຜະເຊີນກັບພຣະທຳຂອງພຣະເຈົ້າໃນຊີວິດຕົວຈິງຂອງພວກເຂົາ, ພວກເຂົາຈຶ່ງສາມາດເຫັນພາລະກິດຂອງພຣະວິນຍານບໍລິສຸດໄດ້. ໃນຊີວິດປະຈຳວັນຂອງພວກເຂົາ ຖ້າຜູ້ຄົນຢູ່ໃນສະພາວະທີ່ດີ ແລະ ມີຊີວິດຝ່າຍວິນຍານທີ່ປົກກະຕິ, ແລ້ວພວກເຂົາກໍມີພາລະກິດຂອງພຣະວິນຍານບໍລິສຸດ. ໃນສະພາວະດັ່ງກ່າວ, ເມື່ອພວກເຂົາກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ພວກເຂົາກໍມີຄວາມເຊື່ອ; ເມື່ອພວກເຂົາອະທິຖານ, ພວກເຂົາຈະໄດ້ຮັບການດົນບັນດານໃຈ; ເມື່ອບາງສິ່ງເກີດຂຶ້ນກັບພວກເຂົາ ພວກເຂົາບໍ່ຢູ່ຊື່ໆ; ແລະ ໃນຂະນະທີ່ສິ່ງຕ່າງໆເກີດຂຶ້ນ, ພວກເຂົາກໍສາມາດເຫັນບົດຮຽນພາຍໃນສິ່ງເຫຼົ່ານັ້ນທີ່ພຣະເຈົ້າຕ້ອງການໃຫ້ພວກເຂົາຮຽນຮູ້. ພວກເຂົາກໍບໍ່ຢູ່ຊື່ໆ ຫຼື ອ່ອນແອ ແລະ ເຖິງແມ່ນວ່າ ພວກເຂົາມີຄວາມຫຍຸ້ງຍາກຢ່າງແທ້ຈິງ, ພວກເຂົາກໍເຕັມໃຈທີ່ຈະເຊື່ອຟັງການຈັດແຈງທຸກຢ່າງຂອງພຣະເຈົ້າ.

ແມ່ນຫຍັງຄືຜົນທີ່ຖືກບັນລຸໂດຍພາລະກິດຂອງພຣະວິນຍານບໍລິສຸດ? ເຈົ້າອາດໂງ່ຈ້າ ແລະ ເຈົ້າອາດປາສະຈາກການແຍກແຍະຊົ່ວດີ, ແຕ່ພຣະວິນຍານບໍລິສຸດພຽງແຕ່ຈຳເປັນຕ້ອງປະຕິບັດພາລະກິດ ແລະ ຈະມີຄວາມເຊື່ອໃນເຈົ້າ ແລະ ເຈົ້າຮູ້ສຶກຢູ່ສະເໝີວ່າ ເຈົ້າບໍ່ສາມາດຮັກພຣະເຈົ້າໄດ້ຢ່າງພຽງພໍ, ເພື່ອໃຫ້ເຈົ້າເຕັມໃຈທີ່ຈະຮ່ວມມື, ເພື່ອທີ່ຈະເຕັມໃຈຮ່ວມມື ບໍ່ວ່າຄວາມຫຍຸ້ງຍາກຢູ່ຂ້າງໜ້າຈະ

ຍິ່ງໃຫຍ່ພຽງໃດກໍຕາມ. ສິ່ງຕ່າງໆຈະເກີດຂຶ້ນກັບເຈົ້າ ແລະ ມັນຈະບໍ່ຊັດເຈນສຳລັບເຈົ້າ ບໍ່ວ່າພວກມັນມາຈາກພຣະເຈົ້າ ຫຼື ຈາກຊາຕານ, ແຕ່ເຈົ້າຈະສາມາດລໍຖ້າ ແລະ ເຈົ້າຈະບໍ່ກຽດຄ້ານ ຫຼື ເລີນເລີ້ຕໍ່ໜ້າທີ່. ສິ່ງນີ້ແມ່ນພາລະກິດປົກກະຕິຂອງພຣະວິນຍານບໍລິສຸດ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດພາຍໃນເຈົ້າ, ເຈົ້າຈະຍັງພະເຊີນກັບຄວາມຫຍຸ້ງຍາກທີ່ແທ້ຈິງ: ບາງເທື່ອ ເຈົ້າຈະຖືກເຮັດໃຫ້ຮ້ອງໄຫ້ ແລະ ບາງເທື່ອ ມີສິ່ງຕ່າງໆທີ່ເຈົ້າບໍ່ສາມາດເອົາຊະນະໄດ້, ແຕ່ທຸກສິ່ງລ້ວນແລ້ວແຕ່ເປັນຂັ້ນຕອນຂອງພາລະກິດທຳມະດາຂອງພຣະວິນຍານບໍລິສຸດ. ເຖິງແມ່ນວ່າເຈົ້າບໍ່ເອົາຊະນະຄວາມຫຍຸ້ງຍາກເຫຼົ່ານັ້ນ ແລະ ເຖິງແມ່ນວ່າ ໃນເວລານັ້ນ ເຈົ້າອ່ອນແອ ແລະ ເຕັມໄປດ້ວຍການຈົ່ມຕໍ່ວ່າ, ຫຼັງຈາກນັ້ນເຈົ້າຍັງສາມາດຮັກພຣະເຈົ້າດ້ວຍຄວາມເຊື່ອຢ່າງແທ້ຈິງໄດ້. ຄວາມບໍ່ຄິ້ນລົນຂອງເຈົ້າບໍ່ສາມາດຫ້າມເຈົ້າຈາກການມີປະສົບການທີ່ປົກກະຕິ ແລະ ບໍ່ວ່າຄົນອື່ນເວົ້າແນວໃດກໍຕາມ ແລະ ຄົນອື່ນໂຈມຕີແນວໃດກໍຕາມ ເຈົ້າຍັງສາມາດຮັກພຣະເຈົ້າໄດ້. ໃນລະຫວ່າງຄຳອະທິຖານ, ເຈົ້າຮູ້ສຶກຢູ່ສະເໝີວ່າໃນອະດີດ ເຈົ້າເປັນໜີ້ບຸນຄຸນພຣະເຈົ້າຫຼາຍ ແລະ ເຈົ້າຕັ້ງໃຈທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ ແລະ ປະຖິ້ມເນື້ອໜັງເມື່ອໃດກໍຕາມທີ່ເຈົ້າພະເຊີນກັບສິ່ງດັ່ງກ່າວນັ້ນອີກ. ຄວາມເຂັ້ມແຂງນີ້ສະແດງວ່າພາລະກິດຂອງພຣະວິນຍານບໍລິສຸດຢູ່ພາຍໃນຕົວເຈົ້າ. ສິ່ງນີ້ແມ່ນສະພາວະປົກກະຕິຂອງພາລະກິດຂອງພຣະວິນຍານບໍລິສຸດ.

ແມ່ນຫຍັງຄືພາລະກິດທີ່ມາຈາກຊາຕານ? ໃນພາລະກິດທີ່ມາຈາກຊາຕານ, ນິມິດທີ່ຢູ່ພາຍໃນຜູ້ຄົນບໍ່ຊັດເຈນ; ຜູ້ຄົນປາສະຈາກຄວາມເປັນມະນຸດທີ່ທຳມະດາ, ແຮງຈູງໃຈທີ່ຢູ່ເບື້ອງຫຼັງການກະທຳຂອງພວກເຂົາກໍຜິດ ແລະ ເຖິງແມ່ນວ່າ ພວກເຂົາປາຖະໜາທີ່ຈະຮັກພຣະເຈົ້າ ມັນກໍມີຂໍ້ອ້າງພາຍໃນພວກເຂົາຢູ່ສະເໝີ ແລະ ຂໍ້ອ້າງ ແລະ ຄວາມຄິດເຫຼົ່ານີ້ແຊກແຊງພາຍໃນພວກເຂົາຢູ່ສະເໝີ, ໂດຍຈຳກັດການເຕີບໂຕຂອງຊີວິດພວກເຂົາ ແລະ ຫ້າມພວກເຂົາຈາກການມາຢູ່ຕໍ່ໜ້າພຣະເຈົ້າໃນສະພາບການທີ່ປົກກະຕິ. ນີ້ໝາຍຄວາມວ່າ ທັນທີທີ່ພາລະກິດຂອງຊາຕານຢູ່ພາຍໃນຜູ້ຄົນ, ຫົວໃຈຂອງພວກເຂົາກໍບໍ່ສາມາດສະຫງົບຢູ່ຕໍ່ໜ້າພຣະເຈົ້າໄດ້. ຜູ້ຄົນດັ່ງກ່າວບໍ່ຮູ້ວ່າຈະເຮັດແນວໃດກັບພວກເຂົາ, ເມື່ອພວກເຂົາເຫັນການຊຸມນຸມຮ່ວມກັນ, ພວກເຂົາຕ້ອງການແລ່ນໜີ ແລະ ພວກເຂົາບໍ່ສາມາດຫຼັບຕາຂອງພວກເຂົາ ໃນເວລາທີ່ຄົນອື່ນອະທິຖານ. ພາລະກິດຂອງວິນຍານຊົ່ວຮ້າຍທຳລາຍຄວາມສຳພັນປົກກະຕິລະຫວ່າງມະນຸດ ແລະ ພຣະເຈົ້າ ແລະ ລົບກວນນິມິດຜ່ານມາຂອງຜູ້ຄົນ ຫຼື ຫົນທາງແຫ່ງການເຂົ້າສູ່ຊີວິດທີ່ຜ່ານມາຂອງພວກເຂົາ; ໃນຫົວໃຈຂອງພວກເຂົາ, ພວກເຂົາບໍ່ສາມາດຫຍັບເຂົ້າໃກ້ພຣະເຈົ້າໄດ້ ແລະ ສິ່ງຕ່າງໆເກີດຂຶ້ນຢູ່ສະເໝີ ເຊິ່ງລົບກວນພວກເຂົາ ແລະ ເປັນຫ່ວງໂສ້ຜູກມັດພວກເຂົາ. ຫົວໃຈຂອງພວກເຂົາບໍ່ສາມາດຄົ້ນພົບຄວາມສະຫງົບສຸກໄດ້ ແລະ ພວກເຂົາບໍ່ມີກຳລັງໃຈທີ່ຈະຮັກພຣະເຈົ້າ ແລະ ເຮັດໃຫ້ວິນຍານຂອງພວກເຂົາຈົມລົງ. ສິ່ງດັ່ງກ່າວແມ່ນການສະແດງອອກຂອງພາລະກິດຂອງຊາຕານ. ການສະແດງອອກຂອງພາລະກິດຂອງຊາຕານແມ່ນ: ການບໍ່ສາມາດມີຈຸດຢືນຂອງເຈົ້າ ແລະ ຢືນເປັນພະຍານ, ເຮັດໃຫ້ເຈົ້າກາຍເປັນຄົນທີ່ບົກຜ່ອງຕໍ່ໜ້າພຣະເຈົ້າ ແລະ ເປັນຄົນທີ່ບໍ່ມີຄວາມຊື່ສັດຕໍ່ພຣະເຈົ້າ. ເມື່ອຊາຕານແຊກແຊງ, ເຈົ້າສູນເສຍຄວາມຮັກ ແລະ ຄວາມຊື່ສັດ

ໃນຕົວເຈົ້າທີ່ມີຕໍ່ພຣະເຈົ້າ, ຄວາມສຳພັນທີ່ທຳມະດາລະຫວ່າງເຈົ້າກັບພຣະເຈົ້າຖືກຮື້ອອກ, ເຈົ້າບໍ່ສະແຫວງຫາຄວາມຈິງ ຫຼື ປັບປຸງຕົວເອງ; ເຈົ້າຖອຍຫຼັງ ແລະ ບໍ່ດິ້ນລົນ, ເຈົ້າເຮັດຕາມໃຈຕົນເອງ, ເຈົ້າໃຫ້ອິດສະຫຼະແກ່ການຂະຫຍາຍຄວາມບາບ ແລະ ບໍ່ໄດ້ກຽດຊັງຄວາມຜິດບາບ; ຍິ່ງໄປກວ່ານັ້ນ ການແຊກແຊງຂອງຊາຕານເຮັດໃຫ້ເຈົ້າຂາດສິນທຳ; ມັນເຮັດໃຫ້ການສຳຜັດຂອງພຣະເຈົ້າຫາຍໄປຈາກເຈົ້າ ແລະ ເຮັດໃຫ້ເຈົ້າຈົ່ມຕໍ່ວ່າພຣະເຈົ້າ ແລະ ຕໍ່ຕ້ານພຣະອົງ, ພາໃຫ້ເຈົ້າຕັ້ງຄຳຖາມກັບພຣະເຈົ້າ; ເຖິງກັບມີຄວາມສ່ຽງທີ່ເຈົ້າຈະປະຖິ້ມພຣະເຈົ້າ. ທັງໝົດນີ້ແມ່ນມາຈາກຊາຕານ.

ເມື່ອບາງສິ່ງເກີດຂຶ້ນກັບເຈົ້າໃນຊີວິດປະຈຳວັນຂອງເຈົ້າ, ເຈົ້າຄວນຈຳແນກແນວໃດວ່າ ມັນມາຈາພາລະກິດຂອງພຣະວິນຍານບໍລິສຸດ ຫຼື ຈາກພາລະກິດຂອງຊາຕານ? ເມື່ອສະພາບການຂອງມະນຸດເປັນປົກກະຕິ, ແລ້ວຊີວິດຝ່າຍວິນຍານຂອງພວກເຂົາ ແລະ ຊີວິດຂອງພວກເຂົາໃນເນື້ອໜັງກໍປົກກະຕິ ແລະ ເຫດຜົນຂອງພວກເຂົາກໍປົກກະຕິ ແລະ ເປັນລະບຽບ. ເມື່ອພວກເຂົາຢູ່ໃນສະພາບການນີ້, ສິ່ງທີ່ພວກເຂົາພະເຊີນ ແລະ ມາຮູ້ຈັກພາຍໃນຕົວພວກເຂົາເອງກໍສາມາດເວົ້າໄດ້ໂດຍທົ່ວໄປວ່າ ມາຈາກການສຳຜັດຂອງພຣະວິນຍານບໍລິສຸດ (ມີຄວາມເຂົ້າໃຈ ຫຼື ມີຄວາມຮູ້ບາງຢ່າງທີ່ງ່າຍດາຍ ເມື່ອພວກເຂົາກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ຫຼື ຊື່ສັດໃນບາງສິ່ງ ຫຼື ມີກຳລັງທີ່ຈະຮັກພຣະເຈົ້າໃນບາງສິ່ງ, ທຸກສິ່ງນີ້ລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ). ພາລະກິດຂອງພຣະວິນຍານບໍລິສຸດໃນມະນຸດແມ່ນກໍປົກກະຕິເປັນພິເສດ; ມະນຸດບໍ່ສາມາດຮູ້ສຶກໄດ້ ແລະ ຄືກັບວ່າ ພາລະກິດດັ່ງກ່າວຜ່ານຕົວມະນຸດເອງ, ເຖິງແມ່ນວ່າ ໃນຄວາມເປັນຈິງແລ້ວ ມັນຄືພາລະກິດຂອງພຣະວິນຍານບໍລິສຸດ. ໃນຊີວິດປະຈຳວັນ, ພຣະວິນຍານບໍລິສຸດປະຕິບັດພາລະກິດທັງຍິ່ງໃຫຍ່ ແລະ ເລັກນ້ອຍໃນທຸກຄົນ ແລະ ມີພຽງແຕ່ຂອບເຂດຂອງພາລະກິດນີ້ທີ່ແຕກຕ່າງກັນ. ບາງຄົນມີຄວາມສາມາດດີ ແລະ ພວກເຂົາເຂົ້າໃຈສິ່ງຕ່າງໆໄດ້ຢ່າງວ່ອງໄວ ແລະ ຄວາມສະຫວ່າງຂອງພຣະວິນຍານບໍລິສຸດກໍຍິ່ງໃຫຍ່ເປັນພິເສດໃນຕົວພວກເຂົາ. ໃນຂະນະດຽວກັນ ບາງຄົນມີຄວາມສາມາດຕໍ່າ ແລະ ມັນໃຊ້ເວລາດົນກວ່າທີ່ພວກເຂົາຈະເຂົ້າໃຈສິ່ງຕ່າງໆ, ແຕ່ພຣະວິນຍານສຳຜັດພວກເຂົາຈາກພາຍໃນ ແລະ ພວກເຂົາກໍຈະສາມາດບັນລຸຄວາມຊື່ສັດໃຫ້ກັບພຣະເຈົ້າໄດ້ເຊັ່ນກັນ, ພຣະວິນຍານບໍລິສຸດປະຕິບັດພາລະກິດໃນທຸກຄົນທີ່ສະແຫວງຫາພຣະເຈົ້າ. ໃນຊີວິດປະຈຳວັນ ເມື່ອຜູ້ຄົນບໍ່ຕໍ່ຕ້ານ ຫຼື ກະບົດຕໍ່ພຣະເຈົ້າ, ບໍ່ເຮັດສິ່ງຕ່າງໆທີ່ບໍ່ຖືກກັບການຄຸ້ມຄອງຂອງພຣະເຈົ້າ ແລະ ບໍ່ແຊກແຊງກັບພາລະກິດຂອງພຣະເຈົ້າ, ແລ້ວພຣະວິນຍານຂອງພຣະເຈົ້າກໍປະຕິບັດໃນພວກເຂົາແຕ່ລະຄົນ ໃນຂອບເຂດທີ່ຍິ່ງໃຫຍ່ກວ່າ ຫຼື ເລັກນ້ອຍກວ່າ; ພຣະອົງສຳຜັດພວກເຂົາ, ໃຫ້ແສງສະຫວ່າງແກ່ພວກເຂົາ, ມອບຄວາມເຊື່ອໃຫ້ກັບພວກເຂົາ, ມອບໃຫ້ກຳລັງແກ່ພວກເຂົາ ແລະ ຂັບເຄື່ອນພວກເຂົາໃຫ້ເຂົ້າສູ່ຢ່າງຫ້າວຫັນ, ບໍ່ຂີ້ຄ້ານ ຫຼື ຕ້ອງການຄວາມສຸກທາງເນື້ອໜັງ, ເຕັມໃຈທີ່ຈະປະຕິບັດຄວາມຈິງ ແລະ ໃຝ່ຫາພຣະທຳຂອງພຣະເຈົ້າ. ທຸກສິ່ງນີ້ແມ່ນພາລະກິດທີ່ມາຈາກພຣະວິນຍານບໍລິສຸດ.

ເມື່ອສະພາວະຂອງມະນຸດບໍ່ປົກກະຕິ, ພວກເຂົາກໍຈະຖືກປະຖິ້ມໂດຍພຣະວິນຍານບໍລິສຸດ; ໃນຄວາມຄິດຂອງພວກເຂົາ ພວກເຂົາມີແນວໂນ້ມທີ່ຈະຈົ່ມ, ແຮງຜັກດັນຂອງພວກເຂົາກໍຜິດ, ພວກເຂົາ

ຂີ້ຄ້ານ, ພວກເຂົາໝົກມຸ້ນກັບເນື້ອໜັງ ແລະ ຫົວໃຈຂອງພວກເຂົາກະບົດຕໍ່ຄວາມຈິງ ແລະ ທຸກສິ່ງນີ້ແມ່ນມາຈາກຊາຕານ. ເມື່ອສະພາບການຂອງຜູ້ຄົນບໍ່ປົກກະຕິ, ເມື່ອພວກເຂົາມືດມົວຢູ່ຂ້າງໃນ ແລະ ໄດ້ສູນເສຍເຫດຜົນທີ່ເປັນປົກກະຕິຂອງພວກເຂົາ, ຖືກພຣະວິນຍານບໍລິສຸດປະຖິ້ມ ແລະ ບໍ່ສາມາດສໍາຜັດພຣະເຈົ້າທີ່ຢູ່ພາຍໃນຕົວພວກເຂົາໄດ້, ນີ້ແມ່ນຕອນທີ່ຊາຕານກໍາລັງປະຕິບັດພາລະກິດພາຍໃນຕົວພວກເຂົາ. ຖ້າຜູ້ຄົນມີກໍາລັງໃນຕົວພວກເຂົາຢູ່ສະເໝີ ແລະ ຮັກພຣະເຈົ້າຢູ່ສະເໝີ ແລ້ວໂດຍທົ່ວໄປເມື່ອຫຼາຍສິ່ງເກີດຂຶ້ນກັບພວກເຂົາ ສິ່ງເຫຼົ່ານັ້ນແມ່ນມາຈາກພຣະວິນຍານບໍລິສຸດ ແລະ ໃຜກໍຕາມທີ່ພວກເຂົາພົບປະ, ການພົບປະດັ່ງກ່າວແມ່ນຜົນຂອງການຈັດແຈງຂອງພຣະເຈົ້າ. ນີ້ໝາຍຄວາມວ່າເມື່ອເຈົ້າຢູ່ໃນສະພາບການທີ່ປົກກະຕິ, ເມື່ອເຈົ້າຢູ່ພາຍໃນພາລະກິດທີ່ຍິ່ງໃຫຍ່ຂອງພຣະວິນຍານບໍລິສຸດ, ແລ້ວມັນເປັນໄປບໍ່ໄດ້ທີ່ຊາຕານຈະເຮັດໃຫ້ເຈົ້າສັ່ນຄອນ. ບົນພື້ນຖານນີ້ ມັນສາມາດເວົ້າໄດ້ວ່າ ທຸກສິ່ງມາຈາກພຣະວິນຍານບໍລິສຸດ ແລະ ເຖິງແມ່ນວ່າ ເຈົ້າອາດມີຄວາມຄິດທີ່ບໍ່ຖືກຕ້ອງ, ເຈົ້າສາມາດປະຖິ້ມພວກມັນໄດ້ ແລະ ເຈົ້າບໍ່ປະຕິບັດຕາມພວກເຂົາ. ທັງໝົດນີ້ມາຈາກພາລະກິດຂອງພຣະວິນຍານບໍລິສຸດ. ຊາຕານແຊກແຊງໃນສະຖານະການໃດ? ມັນງ່າຍທີ່ຊາຕານຈະປະຕິບັດພາລະກິດພາຍໃນເຈົ້າເມື່ອສະພາບການຂອງເຈົ້າບໍ່ປົກກະຕິ, ເມື່ອເຈົ້າບໍ່ໄດ້ຮັບການສໍາຜັດຈາກພຣະເຈົ້າ, ແລະ ປາສະຈາກພາລະກິດຂອງພຣະເຈົ້າ, ເມື່ອເຈົ້າກໍເຫືອດແຫ້ງ ແລະ ແຫ້ງແລ້ງຢູ່ພາຍໃນ, ເມື່ອເຈົ້າອະທິຖານຫາພຣະເຈົ້າ ແຕ່ບໍ່ເຂົ້າໃຈຫຍັງເລີຍ ແລະ ເມື່ອເຈົ້າກິນ ແລະ ດື່ມພຣະທໍາຂອງພຣະເຈົ້າ ແຕ່ບໍ່ໄດ້ຮັບຄວາມສະຫວ່າງ ຫຼື ແສງເຍືອງທາງ. ເວົ້າອີກແບບໜຶ່ງກໍຄື ເມື່ອພຣະວິນຍານບໍລິສຸດປະຖິ້ມເຈົ້າ ແລະ ເຈົ້າບໍ່ສາມາດສໍາຜັດພຣະເຈົ້າໄດ້, ແລ້ວຫຼາຍສິ່ງເກີດຂຶ້ນກັບເຈົ້າ ເຊິ່ງມາຈາກການທົດລອງຂອງຊາຕານ. ໃນຂະນະທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ, ຊາຕານຍັງປະຕິບັດພາລະກິດໃນເວລາດຽວກັນ. ພຣະວິນຍານບໍລິສຸດສໍາຜັດມະນຸດຈາກພາຍໃນ, ໃນຂະນະດຽວກັນທີ່ຊາຕານແຊກແຊງຢູ່ໃນມະນຸດ. ເຖິງຢ່າງໃດກໍຕາມ ພາລະກິດຂອງພຣະວິນຍານບໍລິສຸດແມ່ນຢູ່ຕໍາແໜ່ງນໍາໜ້າ ແລະ ຜູ້ຄົນທີ່ມີສະພາບການປົກກະຕິສາມາດເອົາຊະນະໄດ້; ນີ້ແມ່ນໄຊຊະນະແຫ່ງພາລະກິດຂອງພຣະວິນຍານບໍລິສຸດເໜືອພາລະກິດຂອງຊາຕານ. ໃນຂະນະທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ, ອຸປະນິໄສທີ່ເສື່ອມຊາມຍັງມີຢູ່ພາຍໃນຜູ້ຄົນ; ເຖິງຢ່າງໃດກໍຕາມ ໃນລະຫວ່າງພາລະກິດຂອງພຣະວິນຍານບໍລິສຸດ, ມັນງ່າຍສໍາລັບຜູ້ຄົນທີ່ຈະຄົ້ນພົບ ແລະ ຮັບຮູ້ຄວາມກະບົດ, ແຮງຈູງໃຈ ແລະ ມົນທິນຂອງພວກເຂົາ. ມີແຕ່ເມື່ອນັ້ນ ຜູ້ຄົນຈຶ່ງຮູ້ສຶກໂສກເສົ້າ ແລະ ເລີ່ມເຕັມໃຈເພື່ອກັບໃຈ. ດັ່ງນັ້ນ, ອຸປະນິໄສທີ່ກະບົດ ແລະ ເສື່ອມຊາມຂອງພວກເຂົາກໍຖືກໂຍນຖິ້ມພາຍໃນພາລະກິດຂອງພຣະເຈົ້າເທື່ອລະໜ້ອຍ. ພາລະກິດຂອງພຣະວິນຍານບໍລິສຸດ ແມ່ນໂດຍສະເພາະທໍາມະດາ; ໃນຂະນະທີ່ພຣະອົງປະຕິບັດພາລະກິດໃນຜູ້ຄົນ, ພວກເຂົາກໍຍັງມີບັນຫາ, ພວກເຂົາຍັງຮ້ອງໄຫ້, ພວກເຂົາຍັງທົນທານ, ພວກເຂົາຍັງອ່ອນແອ ແລະ ຍັງມີຫຼາຍສິ່ງທີ່ບໍ່ຊັດເຈນກັບພວກເຂົາ, ແຕ່ໃນສະພາວະແບບນັ້ນ ພວກເຂົາສາມາດຫ້າມຕົວເອງຈາກການຖອຍຫຼັງ ແລະ ພວກເຂົາສາມາດຮັກພຣະເຈົ້າໄດ້ ແລະ ເຖິງແມ່ນວ່າ ພວກເຂົາຈະຮ້ອງໄຫ້ ແລະ ໂສກເສົ້າ, ພວກເຂົາຍັງສາມາດສັນລະເສີນພຣະເຈົ້າໄດ້; ພາລະກິດຂອງພຣະວິນຍານ

ບໍລິສຸດແມ່ນໂດຍສະເພາະທຳມະດາ, ບໍ່ແມ່ນສິ່ງທີ່ເໜືອທຳມະຊາດແມ່ນແຕ່ໜ້ອຍດຽວ. ຄົນສ່ວນຫຼາຍເຊື່ອວ່າ ທັນທີທີ່ພຣະວິນຍານບໍລິສຸດເລີ່ມຕົ້ນປະຕິບັດພາລະກິດ, ການປ່ຽນແປງກໍເກີດຂຶ້ນໃນສະພາວະຂອງຜູ້ຄົນ ແລະ ສິ່ງທີ່ສຳຄັນຕໍ່ພວກເຂົາກໍຖືກກຳຈັດອອກ. ຄວາມເຊື່ອດັ່ງກ່າວແມ່ນຄວາມເຊື່ອທີ່ຜິດ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດພາຍໃນຜູ້ຄົນ, ຄວາມບໍ່ດີ້ນລົນຂອງມະນຸດກໍຍັງຢູ່ໃນນັ້ນ ແລະ ວຸດທິພາວະຂອງເຂົາກໍສ່ຳເກົ່າ, ແຕ່ເຂົາມີແສງເຍືອງທາງ ແລະ ຄວາມສະຫວ່າງຂອງພຣະວິນຍານບໍລິສຸດ ແລະ ດ້ວຍເຫດນັ້ນ ສະພາວະຂອງເຂົາກໍແຮງກ້າຫຼາຍຂຶ້ນ, ສະພາບການທີ່ຢູ່ໃນຕົວເຂົາກໍເປັນປົກກະຕິ ແລະ ເຂົາປ່ຽນແປງຢ່າງໄວວາ. ໃນປະສົບການທີ່ແທ້ຈິງຂອງມະນຸດ, ພວກເຂົາສ່ວນໃຫຍ່ມີປະສົບການກັບພາລະກິດຂອງພຣະວິນຍານບໍລິສຸດ ຫຼື ຊາຕານ ແລະ ຖ້າພວກເຂົາບໍ່ສາມາດເຂົ້າໃຈສະພາວະເຫຼົ່ານີ້ໄດ້ ແລະ ບໍ່ແຍກແຍະ, ແລ້ວທາງເຂົ້າສູ່ປະສົບການຕົວຈິງກໍບໍ່ຕ້ອງຖາມເຖິງເລີຍ, ບໍ່ຕ້ອງເວົ້າເຖິງການປ່ຽນແປງໃນອຸປະນິໄສ. ດ້ວຍເຫດນັ້ນ ກະແຈສຳຄັນໃນການມີປະສົບການກັບພາລະກິດຂອງພຣະເຈົ້າແມ່ນການສາມາດເບິ່ງຜ່ານສິ່ງດັ່ງກ່າວ; ດ້ວຍວິທີນີ້ ມັນຈະງ່າຍຂຶ້ນທີ່ພວກເຂົາຈະໄດ້ປະສົບກັບມັນ.

ພາລະກິດຂອງພຣະວິນຍານບໍລິສຸດເຮັດໃຫ້ຜູ້ຄົນສາມາດພັດທະນາຢ່າງຫ້າວຫັນ, ໃນຂະນະທີ່ພາລະກິດຂອງຊາຕານເຮັດໃຫ້ພວກເຂົາຄິດລົບ ແລະ ຖອຍຫຼັງ, ກະບົດ ແລະ ຕໍ່ຕ້ານພຣະອົງ, ສູນເສຍຄວາມເຊື່ອໃນພຣະອົງ ແລະ ອ່ອນແອທີ່ຈະປະຕິບັດໜ້າທີ່ຂອງພວກເຂົາ. ທຸກສິ່ງທີ່ມາຈາກຄວາມສະຫວ່າງຂອງພຣະວິນຍານບໍລິສຸດແມ່ນຂ້ອນຂ້າງເປັນທຳມະຊາດ; ມັນບໍ່ໄດ້ບັງຄັບເຈົ້າ. ຖ້າເຈົ້າຍອມຕໍ່ມັນ, ເຈົ້າກໍຈະມີສັນຕິສຸກ; ຖ້າເຈົ້າບໍ່ປະຕິບັດຕາມ, ແລ້ວໃນພາຍຫຼັງ ເຈົ້າຈະຖືກປະນາມ. ດ້ວຍຄວາມສະຫວ່າງຂອງພຣະວິນຍານບໍລິສຸດ, ບໍ່ມີສິ່ງໃດທີ່ເຈົ້າເຮັດຈະຖືກແຊກແຊງ ຫຼື ຖືກຈຳກັດ; ເຈົ້າຈະຖືກເຮັດໃຫ້ເປັນອິດສະຫຼະ, ຈະມີຫົນທາງເພື່ອປະຕິບັດໃນການກະທຳຂອງເຈົ້າ ແລະ ເຈົ້າຈະບໍ່ຖືກບັງຄັບຈາກສິ່ງໃດໆ, ແຕ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ພາລະກິດຂອງຊາຕານກໍ່ໃຫ້ເກີດການແຊກແຊງໃຫ້ແກ່ເຈົ້າໃນຫຼາຍໆສິ່ງ; ມັນເຮັດໃຫ້ເຈົ້າບໍ່ເຕັມໃຈທີ່ຈະອະທິຖານ, ຂີ້ຄ້ານເກີນໄປທີ່ຈະກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ບໍ່ເຕັມໃຈທີ່ຈະດຳເນີນຕາມຊີວິດຂອງຄຣິສຕະຈັກ ແລະ ມັນເຮັດໃຫ້ເຈົ້າຫ່າງເຫີນຈາກຊີວິດຝ່າຍວິນຍານ. ພາລະກິດຂອງພຣະວິນຍານບໍລິສຸດບໍ່ແຊກແຊງກັບຊີວິດປະຈຳວັນຂອງເຈົ້າ ແລະ ບໍ່ແຊກແຊງກັບຊີວິດຝ່າຍວິນຍານທີ່ປົກກະຕິຂອງເຈົ້າ. ເຈົ້າບໍ່ສາມາດແຍກແຍະຫຼາຍໆສິ່ງໃນຊ່ວງເວລາທີ່ພວກມັນເກີດຂຶ້ນ, ແຕ່ຫຼັງຈາກສອງສາມມື້ ຫົວໃຈຂອງເຈົ້າກໍຈະສົດໃສຂຶ້ນ ແລະ ຄວາມຄິດຂອງເຈົ້າກໍຊັດເຈນຂຶ້ນ. ເຈົ້າມີຄວາມຮູ້ສຶກບາງຢ່າງກ່ຽວກັບສິ່ງຕ່າງໆຂອງວິນຍານ ແລະ ເຈົ້າແຍກແຍະຢ່າງຊ້າໆວ່າ ຄວາມຄິດໄດ້ມາຈາກພຣະເຈົ້າ ຫຼື ຈາກຊາຕານ. ບາງຢ່າງເຮັດໃຫ້ເຈົ້າຕໍ່ຕ້ານພຣະເຈົ້າຢ່າງຊັດເຈນ ແລະ ກະບົດຕໍ່ພຣະເຈົ້າ ຫຼື ຫ້າມເຈົ້າຈາກການນຳໃຊ້ພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດຕົວຈິງ; ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ມາຈາກຊາຕານທັງໝົດ. ບາງສິ່ງກໍບໍ່ສາມາດເຫັນໄດ້ກັບຕາ ແລະ ເຈົ້າບໍ່ສາມາດບອກໄດ້ວ່າ ພວກມັນແມ່ນຫຍັງໃນຊ່ວງເວລານັ້ນ; ໃນພາຍຫຼັງ ເຈົ້າກໍສາມາດເຫັນການສະແດງ ແລະ ຫຼັງຈາກນັ້ນກໍໃຊ້ການແຍກ

ແຍະ. ຖ້າເຈົ້າສາມາດເບິ່ງອອກຢ່າງຊັດເຈນວ່າ ສິ່ງໃດມາຈາກຊາຕານ ແລະ ສິ່ງໃດຖືກນຳພາໂດຍພຣະວິນຍານບໍລິສຸດ, ແລ້ວເຈົ້າຈະບໍ່ຖືກນຳພາໄປທາງທີ່ຜິດໃນປະສົບການຂອງເຈົ້າຢ່າງງ່າຍດາຍ. ບາງເທື່ອ ເມື່ອສະພາບການຂອງເຈົ້າບໍ່ດີ, ແລ້ວເຈົ້າມີຄວາມຄິດບາງຢ່າງທີ່ນຳເອົາເຈົ້າອອກຈາກສະພາວະທີ່ບໍ່ດົ້ນລົນ. ສິ່ງນີ້ສະແດງວ່າ ເຖິງແມ່ນເມື່ອສະພາບການຂອງເຈົ້າບໍ່ອຳນວຍ, ຄວາມຄິດບາງຢ່າງຂອງເຈົ້າກໍຍັງສາມາດມາຈາກພຣະວິນຍານບໍລິສຸດ. ມັນບໍ່ເປັນຈິງທີ່ວ່າ ເມື່ອເຈົ້າບໍ່ດົ້ນລົນ, ຄວາມຄິດທັງໝົດຂອງເຈົ້າແມ່ນມາຈາກຊາຕານ; ຖ້ານັ້ນເປັນຄວາມຈິງ ແລ້ວເມື່ອໃດເຈົ້າຈະສາມາດປ່ຽນແປງສູ່ສະພາວະທີ່ດີໄດ້? ເມື່ອບໍ່ໄດ້ດົ້ນລົນມາໃນໄລຍະເວລາໃດໜຶ່ງ, ພຣະວິນຍານບໍລິສຸດກໍຈະໃຫ້ເຈົ້າມີໂອກາດຖືກເຮັດໃຫ້ສົມບູນແບບ; ພຣະອົງສຳຜັດເຈົ້າ, ນຳເຈົ້າອອກຈາກສະພາວະທີ່ບໍ່ດົ້ນລົນຂອງເຈົ້າ ແລະ ເຈົ້າເຂົ້າສູ່ສະພາວະທີ່ປົກກະຕິ.

ເມື່ອຮູ້ຈັກວ່າ ພາລະກິດຂອງພຣະວິນຍານບໍລິສຸດແມ່ນຫຍັງ ແລະ ພາລະກິດຂອງຊາຕານແມ່ນຫຍັງ, ເຈົ້າສາມາດປຽບທຽບສິ່ງເຫຼົ່ານີ້ກັບສະພາວະຂອງເຈົ້າເອງໃນລະຫວ່າງການປະສົບການຂອງເຈົ້າ ແລະ ກັບປະສົບການຂອງເຈົ້າເອງ ແລະ ດ້ວຍວິທີນີ້ ຈະມີຄວາມຈິງຫຼາຍຢ່າງທີ່ກ່ຽວຂ້ອງກັບຫຼັກການໃນປະສົບການຂອງເຈົ້າ. ເມື່ອເຂົ້າໃຈເຖິງຄວາມຈິງກ່ຽວກັບຫຼັກການເຫຼົ່ານີ້ແລ້ວ ເຈົ້າຈະສາມາດຄວບຄຸມສະພາວະທີ່ແທ້ຈິງຂອງເຈົ້າ, ເຈົ້າຈະສາມາດຈຳແນກໃນທ່າມກາງຜູ້ຄົນ ແລະ ເຫດການ ແລະ ເຈົ້າຈະບໍ່ຕ້ອງໃຊ້ຄວາມພະຍາຍາມຫຼາຍເພື່ອຮັບເອົາພາລະກິດຂອງພຣະວິນຍານບໍລິສຸດ. ແນ່ນອນ, ສິ່ງນີ້ແມ່ນຂຶ້ນຢູ່ກັບວ່າ ແຮງຜັກດັນຂອງເຈົ້າຈະຖືກຕ້ອງ ແລະ ເຈົ້າຈະເຕັມໃຈສະແຫວງຫາ ແລະ ນຳໄປປະຕິບັດ. ພາສາເຊັ່ນນີ້, ພາສາທີ່ກ່ຽວຂ້ອງກັບຫຼັກການ ຄວນເປັນຈຸດເດັ່ນໃນປະສົບການຂອງເຈົ້າ. ຫາກປາສະຈາກມັນ, ປະສົບການຂອງເຈົ້າຈະເຕັມໄປດ້ວຍການແຊກແຊງຂອງຊາຕານ ແລະ ຄວາມຮູ້ທີ່ໂງ່ຈ້າ. ຖ້າເຈົ້າບໍ່ສາມາດເຂົ້າໃຈວ່າ ພຣະວິນຍານບໍລິສຸດປະຕິບັດພາລະກິດແນວໃດ ແລ້ວເຈົ້າກໍບໍ່ເຂົ້າໃຈວ່າຈະອະທິຖານຫາພຣະເຈົ້າແນວໃດ ຫຼື ເຈົ້າຄວນເຂົ້າແນວໃດ ແລະ ຖ້າເຈົ້າບໍ່ເຂົ້າໃຈວ່າຊາຕານເຮັດແນວໃດເພື່ອຫຼອກລວງ ແລະ ແຊກແຊງກັບຜູ້ຄົນ, ແລ້ວເຈົ້າກໍບໍ່ຮູ້ວ່າຈະປະຕິເສດຊາຕານ ແລະ ຍຶດໝັ້ນໃນຄຳພະຍານຂອງເຈົ້າແນວໃດ. ວິທີທີ່ພຣະວິນຍານບໍລິສຸດເຮັດພາລະກິດ ແລະ ວິທີທີ່ຊາຕານກະທຳແມ່ນສິ່ງທີ່ຜູ້ຄົນຄວນເຂົ້າໃຈ ແລະ ພວກມັນແມ່ນສິ່ງຕ່າງໆທີ່ຕ້ອງໄດ້ປະສົບໃນຄວາມເຊື່ອຂອງຜູ້ຄົນໃນພຣະເຈົ້າ.

# ຄຳເຕືອນເຖິງຜູ້ຄົນທີ່ບໍ່ປະຕິບັດຄວາມຈິງ

ໃນບັນດາອ້າຍເອື້ອຍນ້ອງຜູ້ທີ່ມັກລະບາຍຄວາມຄິດລົບຂອງພວກເຂົາອອກແມ່ນລູກສະໝຸນຂອງຊາຕານ ແລະ ພວກເຂົາລົບກວນຄຣິສຕະຈັກ. ຜູ້ຄົນດັ່ງກ່າວຈະຕ້ອງຖືກຂັບໄລ່ ແລະ ກຳຈັດໃນມື້ໃດມື້ໜຶ່ງ. ໃນຄວາມເຊື່ອຂອງພວກເຂົາທີ່ມີຕໍ່ພຣະເຈົ້າ, ຖ້າຜູ້ຄົນບໍ່ມີຫົວໃຈທີ່ເຄົາລົບນັບຖືພຣະເຈົ້າ, ຖ້າພວກເຂົາບໍ່ມີຫົວໃຈທີ່ເຊື່ອຟັງພຣະເຈົ້າ, ແລ້ວບໍ່ພຽງແຕ່ພວກເຂົາຈະບໍ່ສາມາດເຮັດພາລະກິດໃດເລີຍເພື່ອພຣະອົງເທົ່ານັ້ນ, ແຕ່ໃນທາງກົງກັນຂ້າມ ພວກເຂົາຈະກາຍເປັນຜູ້ລົບກວນພາລະກິດຂອງພຣະອົງ ແລະ ເປັນຜູ້ທ້າທາຍພຣະອົງ. ການເຊື່ອໃນພຣະເຈົ້າ ແຕ່ບໍ່ເຊື່ອຟັງ ຫຼື ເຄົາລົບນັບຖືພຣະອົງ ແລະ ພັດຕໍ່ຕ້ານພຣະອົງ ແມ່ນເປັນເລື່ອງທີ່ເສື່ອມເສຍທີ່ສຸດສຳລັບຜູ້ທີ່ມີຄວາມເຊື່ອ. ຖ້າຜູ້ເຊື່ອພຽງແຕ່ບໍ່ສົນໃຈ ແລະ ປ່ອຍຕົວປ່ອຍໃຈໃນຄຳເວົ້າ ແລະ ຄວາມປະພຶດຂອງພວກເຂົາຄືກັບຜູ້ທີ່ບໍ່ເຊື່ອ, ແລ້ວພວກເຂົາກໍຍິ່ງຊົ່ວຮ້າຍກວ່າຜູ້ທີ່ບໍ່ເຊື່ອ; ພວກເຂົາແມ່ນຕົ້ນແບບຂອງຜີສາດ. ຜູ້ທີ່ລະບາຍຄຳເວົ້າທີ່ເປັນພິດ ແລະ ເຈດຕະນາຮ້າຍຂອງພວກເຂົາພາຍໃນຄຣິສຕະຈັກ, ຜູ້ທີ່ປ່ອຍຂ່າວລື, ສ້າງຄວາມແຕກແຍກ ແລະ ສ້າງພັກສ້າງພວກໃນທ່າມກາງອ້າຍເອື້ອຍນ້ອງ, ພວກເຂົາຄວນຖືກຂັບໄລ່ອອກຈາກຄຣິສຕະຈັກ. ຢ່າງໃດກໍຕາມ, ຍ້ອນຕອນນີ້ແມ່ນຍຸກທີ່ແຕກຕ່າງກັນຂອງພາລະກິດຂອງພຣະເຈົ້າ, ຜູ້ຄົນເຫຼົ່ານີ້ຈຶ່ງຖືກຈຳກັດ ຍ້ອນພວກເຂົາຈະຖືກໂຍນອອກຢ່າງແນ່ນອນ. ທຸກຄົນທີ່ຖືກຊາຕານເຮັດໃຫ້ເສື່ອມຊາມແມ່ນມີອຸປະນິໄສທີ່ເສື່ອມຊາມ. ບາງຄົນພຽງແຕ່ມີອຸປະນິໄສທີ່ເສື່ອມຊາມ, ໃນຂະນະທີ່ຄົນອື່ນແມ່ນແຕກຕ່າງ: ພວກເຂົາບໍ່ພຽງແຕ່ມີອຸປະນິໄສທີ່ເສື່ອມຊາມແບບຊາຕານ ແຕ່ທຳມະຊາດຂອງພວກເຂົາຍັງຊົ່ວຮ້າຍຫຼາຍອີກດ້ວຍ. ຄຳເວົ້າ ແລະ ການກະທຳຂອງພວກເຂົາບໍ່ພຽງແຕ່ເປີດເຜີຍອຸປະນິໄສທີ່ເສື່ອມຊາມແບບຊາຕານ; ຍິ່ງໄປກວ່ານັ້ນ ຜູ້ຄົນເຫຼົ່ານີ້ແມ່ນຊາຕານທີ່ຊົ່ວຮ້າຍຕົວຈິງ. ພຶດຕິກຳຂອງພວກເຂົາຂັດຂວາງ ແລະ ລົບກວນພາລະກິດຂອງພຣະເຈົ້າ, ມັນເຮັດໃຫ້ທາງເຂົ້າສູ່ຊີວິດຂອງອ້າຍເອື້ອຍນ້ອງອ່ອນແອລົງ ແລະ ມັນທຳລາຍຊີວິດທີ່ປົກກະຕິໃນຄຣິສຕະຈັກ. ບໍ່ໄວກໍຊ້າ ໝາປ່າເຫຼົ່ານີ້ທີ່ສວມໃສ່ເສື້ອຜ້າຂອງແກະຈະຖືກກຳຈັດອອກ; ທັດສະນະຄະຕິທີ່ຮຸນແຮງ ແລະ ທັດສະນະຄະຕິແຫ່ງການປະຕິເສດ ແມ່ນຄວນຖືກນຳໃຊ້ຕໍ່ລູກສະໝຸນເຫຼົ່ານີ້ຂອງຊາຕານ. ພຽງແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນການຢືນຢູ່ຂ້າງພຣະເຈົ້າ ແລະ ຜູ້ທີ່ບໍ່ສາມາດເຮັດແບບນັ້ນກໍກິ້ງເກືອກຢູ່ໜອງຕົມກັບຊາຕານ. ຜູ້ຄົນທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງແມ່ນມີພຣະອົງໃນຫົວໃຈຂອງພວກເຂົາຢູ່ສະເໝີ ແລະ ພວກເຂົາມີຫົວໃຈທີ່ເຄົາລົບນັບຖືພຣະເຈົ້າ ເຊິ່ງນັ້ນກໍຄືຫົວໃຈທີ່ຮັກພຣະເຈົ້າຢູ່ພາຍໃນພວກເຂົາຢູ່ສະເໝີ. ຜູ້ທີ່ເຊື່ອໃນພຣະເຈົ້າຄວນເຮັດສິ່ງຕ່າງໆດ້ວຍຄວາມລະມັດລະວັງ ແລະ ຢ່າງຮອບຄອບ ແລະ ທຸກຢ່າງທີ່ພວກເຂົາເຮັດຄວນເປັນໄປຕາມຄວາມຕ້ອງການຂອງພຣະເຈົ້າ ແລະ ສາມາດເຮັດໃຫ້ພໍໃຈພຣະອົງໄດ້. ພວກເຂົາບໍ່ຄວນຫົວແຂງ ໂດຍເຮັດໃນສິ່ງຫຍັງກໍຕາມທີ່ພວກເຂົາພໍໃຈ; ສິ່ງນັ້ນບໍ່ເໝາະສົມກັບຄວາມເປັນນັກບຸນ. ຜູ້ຄົນຕ້ອງບໍ່ແລ່ນອາລະວາດ ໂດຍແກວ່ງທຸງຂອງພຣະເຈົ້າໄປທົ່ວທຸກບ່ອນ ໃນຂະນະທີ່ຍ່າງວາງທ່າໂອ້ອວດ ແລະ ຫຼອກລວງໄປທຸກແຫ່ງ; ນີ້ແມ່ນການປະພຶດແບບກະບົດທີ່ສຸດ. ຄອບຄົວຕ່າງໆ

ມີກົດລະບຽບຂອງພວກເຂົາ ແລະ ປະເທດຊາດຕ່າງໆກໍມີກົດໝາຍຂອງພວກເຂົາ; ແລ້ວເຮືອນຂອງພຣະເຈົ້າຍິ່ງບໍ່ມີບໍ? ມັນຍິ່ງຈະບໍ່ມີມາດຕະຖານແຮງທີ່ເຂັ້ມງວດກວ່າບໍ? ມັນຍິ່ງຈະບໍ່ມີບົດບັນຍັດແຫ່ງການບໍລິຫານທີ່ຫຼາຍກວ່າບໍ? ຜູ້ຄົນແມ່ນມີອິດສະຫຼະທີ່ຈະເຮັດຕາມສິ່ງທີ່ພວກເຂົາຕ້ອງການ, ແຕ່ບົດບັນຍັດແຫ່ງການບໍລິຫານຂອງພຣະເຈົ້າບໍ່ສາມາດປ່ຽນແປງໄດ້ຕາມອຳເພີໃຈ. ພຣະເຈົ້າແມ່ນພຣະເຈົ້າທີ່ບໍ່ອົດທົນຕໍ່ການລ່ວງເກີນຈາກມະນຸດ; ພຣະອົງແມ່ນພຣະເຈົ້າທີ່ເຮັດໃຫ້ຄົນຕາຍໄດ້. ຜູ້ຄົນບໍ່ຮູ້ສິ່ງນີ້ແທ້ບໍ?

ຄຣິສຕະຈັກທຸກແຫ່ງແມ່ນມີຄົນທີ່ກໍ່ບັນຫາໃຫ້ແກ່ຄຣິສຕະຈັກ ຫຼື ຂັດຂວາງພາລະກິດຂອງພຣະເຈົ້າ. ພວກເຂົາລ້ວນແລ້ວແຕ່ເປັນຊາຕານ ທີ່ໄດ້ແຊກຊຶມເຂົ້າໄປຢູ່ໃນເຮືອນຂອງພຣະເຈົ້າໂດຍການປອມຕົວ. ຜູ້ຄົນດັ່ງກ່າວແມ່ນສະແດງເກັ່ງຫຼາຍ: ພວກເຂົາມາຢ່າງໜ້ານັບຖືຢູ່ຕໍ່ໜ້າເຮົາ, ກົ້ມຫົວ ແລະ ຖູໄຖ, ປະພຶດຕົນຄືໝາຂີ້ເຮື້ອນ ແລະ ອຸທິດ "ທຸກຢ່າງ" ຂອງພວກເຂົາເພື່ອບັນລຸວັດຖຸປະສົງຂອງພວກເຂົາເອງ ແຕ່ເມື່ອຢູ່ຕໍ່ໜ້າອ້າຍເອື້ອຍນ້ອງ ພວກເຂົາກໍຈະສະແດງດ້ານຂີ້ຮ້າຍຂອງພວກເຂົາ. ເມື່ອພວກເຂົາເຫັນຜູ້ຄົນທີ່ປະຕິບັດຄວາມຈິງ, ພວກເຂົາກໍຈະໂຈມຕີ ແລະ ຊຸກຜູ້ຄົນເຫຼົ່ານັ້ນອອກໄປທາງຂ້າງ; ເມື່ອພວກເຂົາເຫັນຜູ້ຄົນທີ່ເປັນຕາຢ້ານກວ່າພວກເຂົາ, ພວກເຂົາກໍຈະຍົກຍ້ອງ ແລະ ປະຈົບປະແຈງຜູ້ຄົນດັ່ງກ່າວ. ພວກເຂົາປະພຶດຢ່າງປ່າເຖື່ອນຢູ່ພາຍໃນຄຣິສຕະຈັກ. ສາມາດເວົ້າໄດ້ວ່າ "ຄົນພາຍໃນທີ່ມັກຂົ່ມເຫັງຄົນອື່ນ" ເຊັ່ນ "ໝາໂຕນ້ອຍໆ" ແມ່ນມີຢູ່ໃນຄຣິສຕະຈັກໂດຍສ່ວນໃຫຍ່. ພວກເຂົາເຮັດຮ່ວມກັນຢ່າງຊົ່ວຮ້າຍ, ສົ່ງສາຍຕາ ແລະ ສັນຍານລັບຫາກັນ ແລະ ໃນບັນດາພວກເຂົາແມ່ນບໍ່ມີໃຜທີ່ປະຕິບັດຄວາມຈິງ. ຜູ້ໃດກໍຕາມທີ່ມີພິດຫຼາຍທີ່ສຸດແມ່ນ "ຫົວໜ້າຜີສາດ" ແລະ ໃຜທີ່ມີກຽດສູງສຸດຈະນຳພາພວກເຂົາ ໂດຍຍົກທຸງຂອງພວກເຂົາຂຶ້ນສູງ. ຜູ້ຄົນເຫຼົ່ານີ້ແລ່ນອາລະວາດທົ່ວຄຣິສຕະຈັກ ໂດຍເຜີຍແຜ່ສິ່ງທີ່ເປັນດ້ານລົບຂອງພວກເຂົາ, ສະແດງເຖິງຄວາມຕາຍ, ເຮັດໃນສິ່ງທີ່ພວກເຂົາພໍໃຈ, ເວົ້າໃນສິ່ງທີ່ພວກເຂົາພໍໃຈ ແລະ ບໍ່ມີໃຜກ້າຢຸດພວກເຂົາ. ພວກເຂົາແມ່ນເຕັມໄປດ້ວຍອຸປະນິໄສຂອງຊາຕານ. ໃນອີກບໍ່ດົນ ພວກເຂົາກໍຈະສ້າງຄວາມວຸ້ນວາຍ ຮ້າຍກວ່າບັນຍາກາດແຫ່ງຄວາມຕາຍ ເຂົ້າໄປໃນຄຣິສຕະຈັກ. ຜູ້ທີ່ຢູ່ພາຍໃນຄຣິສຕະຈັກ ທີ່ປະຕິບັດຄວາມຈິງແມ່ນຖືກປະຕິເສດ ເຊິ່ງບໍ່ສາມາດໃຫ້ທັງໝົດຂອງພວກເຂົາໄດ້ ໃນຂະນະທີ່ຜູ້ທີ່ລົບກວນຄຣິສຕະຈັກ ແລະ ເຜີຍແຜ່ຄວາມຕາຍແມ່ນແລ່ນອາລະວາດພາຍໃນ ແລະ ຍິ່ງໄປກວ່ານັ້ນ ຄົນສ່ວນໃຫຍ່ແມ່ນຕິດຕາມພວກເຂົາ. ຄຣິສຕະຈັກແບບນີ້ແມ່ນຢູ່ພາຍໃຕ້ການຄວບຄຸມຂອງຊາຕານຢ່າງຊັດເຈນ; ເຊິ່ງພະຍາມານເປັນພະລາຊາຂອງພວກມັນ. ຖ້າຜູ້ຊຸມນຸມບໍ່ລຸກຮື້ຂຶ້ນ ແລະ ປະຕິເສດຫົວໜ້າຜີສາດ, ບໍ່ໄວກໍຊ້າພວກເຂົາເອງກໍຈະຫຼົ້ມຈົມເຊັ່ນກັນ. ນັບແຕ່ນີ້ໄປ, ຕ້ອງມີມາດຕະການຕໍ່ຄຣິສຕະຈັກດັ່ງກ່າວ. ຖ້າຜູ້ຄົນທີ່ສາມາດປະຕິບັດຄວາມຈິງເລັກນ້ອຍບໍ່ໄດ້ສະແຫວງຫາ, ແລ້ວຄຣິສຕະຈັກນັ້ນກໍຈະຖືກກຳຈັດອອກ. ຖ້າຄຣິສຕະຈັກບໍ່ມີຄົນເຕັມໃຈປະຕິບັດຄວາມຈິງ ແລະ ບໍ່ມີໃຜສາມາດຢືນເປັນພະຍານໃຫ້ແກ່ພຣະເຈົ້າໄດ້, ແລ້ວຄຣິສຕະຈັກນັ້ນຄວນແຍກອອກທັງໝົດ ແລະ ຄວາມສຳພັນຂອງມັນກັບຄຣິສຕະຈັກອື່ນໆກໍຈະຕ້ອງຖືກຕັດຂາດ. ນີ້ແມ່ນເອີ້ນວ່າ "ການຝັງຄວາມຕາຍ"; ນີ້ຄືສິ່ງທີ່ໝາຍຄວາມວ່າ

ການປະຕິເສດຊາຕານ. ຖ້າຄຣິສຕະຈັກມີຄົນພາຍໃນຫຼາຍຄົນທີ່ມັກຂົ່ມເຫັງຄົນອື່ນ ແລະ ພວກເຂົາກໍຖືກຕິດຕາມໂດຍ "ແມງວັນນ້ອຍ" ທີ່ຂາດຄວາມສາມາດໃນການຕັດສິນທີ່ດີ ແລະ ຖ້າຜູ້ຊຸມນຸມຍັງບໍ່ສາມາດປະຕິເສດຄວາມຜູກມັດ ແລະ ການເປົ່າຫູຂອງຄົນທີ່ມັກຂົ່ມເຫັງຄົນອື່ນເຫຼົ່ານີ້ ເຖິງແມ່ນວ່າຈະໄດ້ເຫັນຄວາມຈິງແລ້ວກໍຕາມ, ຄົນໂງ່ຈ້າທັງໝົດເຫຼົ່ານັ້ນກໍຈະຕ້ອງຖືກກຳຈັດໃນທີ່ສຸດ. ແມງວັນໂຕນ້ອຍໆເຫຼົ່ານີ້ອາດຈະບໍ່ໄດ້ເຮັດຫຍັງຮ້າຍແຮງ ແຕ່ພວກເຂົາກໍຍິ່ງຫຼອກລວງຫຼາຍກວ່າ, ຍິ່ງຊຳນານ ແລະ ຫຼົບຫຼີກເກັ່ງຫຼາຍກວ່າ ແລະ ທຸກຄົນທີ່ເປັນຄືດັ່ງນີ້ຈະຖືກກຳຈັດ. ຈະບໍ່ຖືກຈຶ່ງໄວ້ແມ່ນແຕ່ຄົນດຽວ! ຜູ້ທີ່ເປັນຄົນຂອງຊາຕານຈະຖືກສົ່ງກັບຄືນໄປຫາຊາຕານ ໃນຂະນະທີ່ຜູ້ທີ່ເປັນຄົນຂອງພຣະເຈົ້າຈະໄປຄົ້ນຫາຄວາມຈິງຢ່າງແນ່ນອນ; ສິ່ງນີ້ແມ່ນຕັດສິນໂດຍທຳມະຊາດຂອງພວກເຂົາ. ຈົ່ງໃຫ້ຜູ້ທີ່ຕິດຕາມຊາຕານດັບສະຫຼາຍໄປ! ຈະບໍ່ມີການສະແດງຄວາມປານີປານອມຕໍ່ຜູ້ຄົນເຫຼົ່ານີ້ອີກຕໍ່ໄປ. ຈົ່ງໃຫ້ຜູ້ທີ່ຄົ້ນຫາຄວາມຈິງໄດ້ຮັບສິ່ງທີ່ຈັດກຽມໄວ້ໃຫ້ ແລະ ຂໍໃຫ້ພວກເຂົາມີຄວາມສຸກກັບພຣະທຳຂອງພຣະເຈົ້າຢ່າງສຸດໃຈ. ພຣະເຈົ້າແມ່ນຄວາມຊອບທຳ; ພຣະອົງບໍ່ເຂົ້າຂ້າງຜູ້ໃດ. ຖ້າເຈົ້າເປັນຜີສາດເຈົ້າກໍຈະບໍ່ສາມາດປະຕິບັດຄວາມຈິງ; ຖ້າເຈົ້າເປັນຄົນທີ່ຄົ້ນຫາຄວາມຈິງ ມັນກໍແນ່ຊັດຢູ່ແລ້ວວ່າເຈົ້າກໍຈະບໍ່ຖືກຊາຕານຈັບກຸມຢ່າງແນ່ນອນ. ສິ່ງດັ່ງກ່າວນີ້ແມ່ນເກີນຂໍ້ສົງໄສທັງປວງ.

ຜູ້ຄົນທີ່ບໍ່ສະແຫວງຫາຄວາມກ້າວໜ້າ ແມ່ນປາຖະໜາໃຫ້ຄົນອື່ນເປັນຄົນທີ່ມີດ້ານລົບ ແລະ ຂີ້ຄ້ານຄືພວກເຂົາສະເໝີ. ຜູ້ທີ່ບໍ່ປະຕິບັດຄວາມຈິງແມ່ນອິດສາຜູ້ທີ່ປະຕິບັດຄວາມຈິງ ແລະ ພະຍາຍາມຫຼອກລວງຄົນໂງ່ ແລະ ຜູ້ທີ່ຂາດຄວາມສາມາດໃນການຕັດສິນທີ່ດີສະເໝີ. ສິ່ງຕ່າງໆທີ່ຜູ້ຄົນເຫຼົ່ານີ້ລະບາຍອອກມາສາມາດເຮັດໃຫ້ເຈົ້າເສື່ອມໂຊມ, ຕົກຕໍ່າ, ມີສະພາບຜິດປົກກະຕິ ແລະ ເຕັມໄປດ້ວຍຄວາມມືດ; ພວກເຂົາເຮັດໃຫ້ເຈົ້າຫ່າງເຫີນຈາກພຣະເຈົ້າ ແລະ ເຮັດໃຫ້ເຈົ້າຖະນຸຖະໜອມເນື້ອໜັງ ແລະ ເຮັດຕາມໃຈຕົວເອງ. ຜູ້ຄົນທີ່ບໍ່ຮັກຄວາມຈິງ ແລະ ຜູ້ທີ່ປະຕິບັດຕໍ່ພຣະເຈົ້າພໍເປັນພິທີ ແມ່ນບໍ່ມີຄວາມປຸກຈິດສຳນຶກຕົວເອງ ແລະ ອຸປະນິໄສຂອງຜູ້ຄົນດັ່ງກ່າວແມ່ນລໍ້ໃຫ້ຜູ້ອື່ນເຮັດບາບ ແລະ ຕໍ່ຕ້ານພຣະເຈົ້າ. ພວກເຂົາບໍ່ປະຕິບັດຄວາມຈິງ ຫຼື ແມ່ນແຕ່ພວກເຂົາບໍ່ອະນຸຍາດໃຫ້ຜູ້ອື່ນປະຕິບັດສິ່ງດັ່ງກ່າວ. ພວກເຂົາຖະນຸຖະໜອມຄວາມບາບ ແລະ ບໍ່ກຽດຊັງຕົວເອງ. ພວກເຂົາບໍ່ຮູ້ຈັກຕົວເອງ ແລະ ພວກເຂົາຢຸດຄົນອື່ນຈາກການຮູ້ຈັກຕົວເອງ; ພວກເຂົາຍັງຢຸດຄົນອື່ນຈາກການໂຫຍຫາຄວາມຈິງ. ຄົນທີ່ພວກເຂົາຫຼອກລວງບໍ່ສາມາດເຫັນແສງສະຫວ່າງ. ພວກເຂົາຕົກຢູ່ໃນຄວາມມືດ, ບໍ່ຮູ້ຈັກຕົວເອງ, ບໍ່ມີຄວາມຊັດເຈນກ່ຽວກັບຄວາມຈິງ ແລະ ຫ່າງເຫີນຈາກພຣະເຈົ້າຫຼາຍຂຶ້ນ ແລະ ຫຼາຍຂຶ້ນ. ພວກເຂົາບໍ່ປະຕິບັດຄວາມຈິງ ແລະ ພວກເຂົາຢຸດຄົນອື່ນຈາກການປະຕິບັດຄວາມຈິງ ໂດຍເອົາຄົນໂງ່ເຫຼົ່ານັ້ນມາຢູ່ຕໍ່ໜ້າພວກເຂົາ. ແທນທີ່ຈະເວົ້າວ່າ ພວກເຂົາເຊື່ອໃນພຣະເຈົ້າ, ມັນກໍຈະດີກວ່າ ທີ່ຈະເວົ້າວ່າ ພວກເຂົາເຊື່ອໃນບັນພະບຸລຸດຂອງພວກເຂົາ ຫຼື ວ່າ ສິ່ງທີ່ພວກເຂົາເຊື່ອໃນເທວະຮູບໃນຫົວໃຈຂອງພວກເຂົາ. ມັນຈະດີທີ່ສຸດສຳລັບຜູ້ຄົນເຫຼົ່ານັ້ນທີ່ອ້າງວ່າ ຕົນໄດ້ຕິດຕາມພຣະເຈົ້າ ໃຫ້ເປີດຕາຂອງພວກເຂົາ ແລະ ແຍງເບິ່ງດີໆວ່າ ພວກເຂົາເຊື່ອໃຜກັນແທ້: ເຈົ້າເຊື່ອໃນພຣະເຈົ້າ ຫຼື ຊາຕານກັນແທ້? ຖ້າເຈົ້າຮູ້ວ່າສິ່ງທີ່ເຈົ້າເຊື່ອບໍ່ແມ່ນພຣະເຈົ້າ ແຕ່ເປັນເທວະຮູບຂອງເຈົ້າເອງ, ມັນກໍຈະດີທີ່ສຸດ ຖ້າເຈົ້າບໍ່ອ້າງວ່າ

ໂຕເອງເປັນຜູ້ທີ່ມີຄວາມເຊື່ອ. ຖ້າເຈົ້າບໍ່ຮູ້ແທ້ໆວ່າ ຈະເຊື່ອໃນຕົວໃຜມັນຈະເປັນການດີທີ່ສຸດ ຖ້າເຈົ້າບໍ່ອ້າງວ່າ ຕົນເອງເປັນຜູ້ທີ່ມີຄວາມເຊື່ອ. ການເວົ້າຢ່າງນັ້ນຈະເປັນການໝິ່ນປະໝາດພຣະເຈົ້າ! ບໍ່ມີໃຜບັງຄັບໃຫ້ເຈົ້າເຊື່ອໃນພຣະເຈົ້າ. ຢ່າເວົ້າວ່າ ພວກເຈົ້າເຊື່ອໃນຕົວເຮົາ; ເຮົາພຽງພໍແລ້ວກັບຄຳເວົ້າດັ່ງກ່າວ ແລະ ບໍ່ປາຖະໜາຢາກຟັງມັນອີກ ຍ້ອນວ່າ ສິ່ງທີ່ພວກເຈົ້າເຊື່ອແມ່ນເທວະຮູບທີ່ຢູ່ໃນໃຈຂອງພວກເຈົ້າ ແລະ ຄົນພາຍໃນທີ່ມັກຂົ່ມເຫັງຄົນອື່ນທີ່ຢູ່ທ່າມກາງພວກເຈົ້າ. ຜູ້ທີ່ແກວ່ງຫົວຂອງພວກເຂົາເວລາໄດ້ຍິນຄວາມຈິງ ແລະ ຜູ້ທີ່ຍິ້ມກວ້າງໆເວລາທີ່ໄດ້ຍິນເລື່ອງຄວາມຕາຍ ແມ່ນເປັນລູກຫຼານຂອງຊາຕານ ແລະ ພວກເຂົາຄືຄົນທີ່ຈະຖືກກຳຈັດ. ຢູ່ໃນຄຣິສຕະຈັກແມ່ນມີຄົນຈຳນວນຫຼາຍທີ່ບໍ່ມີຄວາມສາມາດໃນການຕັດສິນທີ່ດີ. ເມື່ອເກີດມີສິ່ງທີ່ຫຼອກລວງ, ພວກເຂົາແມ່ນຢືນຢູ່ຂ້າງຊາຕານ; ພວກເຂົາເຖິງກັບຮູ້ສຶກຜິດ ເມື່ອຖືກເອີ້ນວ່າ ເປັນຜູ້ຮັບໃຊ້ຂອງຊາຕານ. ບາງຄົນອາດຈະເວົ້າວ່າ ພວກເຂົາບໍ່ມີຄວາມສາມາດໃນການຕັດສິນທີ່ດີ ແຕ່ພວກເຂົາແມ່ນຢືນຢູ່ທາງຂ້າງສະເໝີໂດຍປາສະຈາກຄວາມຈິງ, ພວກເຂົາບໍ່ເຄີຍຢືນຢູ່ຝ່າຍຄວາມຈິງໃນເວລາສຳຄັນ, ພວກເຂົາບໍ່ເຄີຍຢືນຂຶ້ນ ແລະ ໂຕ້ຖຽງເພື່ອຄວາມຈິງ. ພວກເຂົາຂາດຄວາມສາມາດໃນການຕັດສິນທີ່ດີບໍ? ເປັນຫຍັງພວກເຂົາຄືຢືນຢູ່ຂ້າງຊາຕານຕະຫຼອດມາ? ເປັນຫຍັງພວກເຂົາຈຶ່ງບໍ່ເຄີຍເວົ້າຄຳໜຶ່ງທີ່ເປັນທຳ ຫຼື ສົມເຫດສົມຜົນໃນການສະໜັບສະໜູນຄວາມຈິງ? ສະຖານະການແບບນີ້ໄດ້ເກີດຂຶ້ນຍ້ອນຄວາມສັບສົນຊົ່ວໄລຍະໜຶ່ງຂອງພວກເຂົາແທ້ບໍ? ຍິ່ງຜູ້ຄົນມີຄວາມສາມາດໜ້ອຍໃນການຕັດສິນໃຈທີ່ດີ ພວກເຂົາກໍຍິ່ງສາມາດຢືນຢູ່ຂ້າງຂອງຄວາມຈິງໜ້ອຍສໍ່ານັ້ນ. ສິ່ງນີ້ສະແດງເຖິງຫຍັງ? ມັນບໍ່ໄດ້ສະແດງໃຫ້ເຫັນວ່າ ຜູ້ຄົນທີ່ບໍ່ມີຄວາມສາມາດໃນການຕັດສິນໃຈທີ່ດີແມ່ນຮັກໃນສິ່ງທີ່ຊົ່ວຮ້າຍບໍ? ມັນບໍ່ໄດ້ສະແດງໃຫ້ເຫັນວ່າ ພວກເຂົາແມ່ນລູກຫຼານທີ່ຈິງຮັກພັກດີຂອງຊາຕານບໍ? ເປັນຫຍັງພວກເຂົາຈຶ່ງສາມາດຢືນຢູ່ຂ້າງຊາຕານສະເໝີ ແລະ ເວົ້າພາສາຂອງມັນ? ທຸກຄຳເວົ້າ ແລະ ການກະທຳຂອງພວກເຂົາ ແລະ ການສະແດງອອກທາງສີໜ້າຂອງພວກເຂົາ ແມ່ນພຽງພໍທີ່ຈະພິສູດວ່າ ພວກເຂົາບໍ່ແມ່ນຄົນທີ່ມີຄວາມຮັກຕໍ່ຄວາມຈິງ; ໃນທາງກົງກັນຂ້າມ ພວກເຂົາແມ່ນຜູ້ຄົນທີ່ກຽດຊັງຄວາມຈິງ. ການທີ່ພວກເຂົາສາມາດຢືນຢູ່ຂ້າງຊາຕານແມ່ນພຽງພໍທີ່ຈະພິສູດວ່າ ຊາຕານຮັກຜີສາດນ້ອຍເຫຼົ່ານີ້ແທ້ໆຜູ້ທີ່ໃຊ້ຊີວິດຂອງພວກເຂົາຕໍ່ສູ້ເພື່ອປະໂຫຍດຂອງຊາຕານ. ຂໍ້ແທ້ຈິງທັງໝົດເຫຼົ່ານີ້ບໍ່ຊັດເຈນອີກບໍ? ຖ້າເຈົ້າແມ່ນຄົນທີ່ຮັກຄວາມຈິງຢ່າງແທ້ຈິງ ແລ້ວເປັນຫຍັງເຈົ້າຄືບໍ່ນັບຖືຜູ້ທີ່ປະຕິບັດຄວາມຈິງ ແລະ ເປັນຫຍັງເຈົ້າຈຶ່ງຕິດຕາມຄົນທີ່ບໍ່ປະຕິບັດຄວາມຈິງ ໃນເວລາທີ່ສີໜ້າຂອງພວກເຂົາປ່ຽນໄປ? ນີ້ແມ່ນບັນຫາປະເພດໃດ? ເຮົາບໍ່ສົນວ່າ ເຈົ້າຈະມີຄວາມສາມາດໃນການຕັດສິນທີ່ດີ ຫຼື ບໍ່. ເຮົາບໍ່ສົນວ່າເຈົ້າໄດ້ຈ່າຍລາຄາຢ່າງໃຫຍ່ຫຼວງຫຼາຍສໍ່າໃດ. ເຮົາບໍ່ສົນວ່າ ກອງກຳລັງຂອງເຈົ້າຈະຍິ່ງໃຫຍ່ສໍ່າໃດ ແລະເຮົາບໍ່ສົນວ່າ ເຈົ້າຄືຄົນພາຍໃນທີ່ມັກຂົ່ມເຫັງຄົນອື່ນ ຫຼື ຫົວໜ້າທີມທີ່ຖືທຸງ. ຖ້າກອງກຳລັງຂອງເຈົ້າຍິ່ງໃຫຍ່, ນັ້ນກໍຍ້ອນຄວາມຊ່ວຍເຫຼືອຈາກກຳລັງຂອງຊາຕານເທົ່ານັ້ນ. ຖ້າກຽດຂອງເຈົ້າສູງ, ນັ້ນກໍຍ້ອນວ່າ ຫຼາຍຄົນທີ່ຢູ່ອ້ອມຂ້າງເຈົ້າບໍ່ໄດ້ປະຕິບັດຄວາມຈິງ. ຖ້າເຈົ້າບໍ່ໄດ້ຖືກຂັບໄລ່ອອກ, ນັ້ນກໍຍ້ອນວ່າຕອນນີ້ບໍ່ແມ່ນເວລາຂອງການເຮັດພາລະກິດການຂັບໄລ່ເທື່ອ; ໃນທາງກົງກັນຂ້າມ ມັນແມ່ນເວລາ

ແຫ່ງພາລະກິດຂອງການກຳຈັດ. ບໍ່ມີຄວາມຮີບດ່ວນທີ່ຈະຂັບໄລ່ເຈົ້າຕອນນີ້. ເຮົາພຽງແຕ່ລໍຖ້າໃຫ້ມື້ນັ້ນມາເຖິງ ມື້ທີ່ເຮົາຈະລົງໂທດເຈົ້າຫຼັງຈາກທີ່ເຈົ້າຖືກກຳຈັດ. ຜູ້ໃດທີ່ບໍ່ປະຕິບັດຄວາມຈິງຈະຖືກກຳຈັດ!

ຜູ້ທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ ແມ່ນຜູ້ທີ່ເຕັມໃຈນຳເອົາພຣະທຳຂອງພຣະເຈົ້າໄປປະຕິບັດ ແລະ ເຕັມໃຈທີ່ຈະປະຕິບັດຄວາມຈິງ. ຜູ້ຄົນທີ່ສາມາດຢືນຢ່າງເດັດດ່ຽວໃນການເປັນພະຍານຂອງພວກເຂົາໃຫ້ກັບພຣະເຈົ້າຢ່າງແທ້ຈິງແມ່ນຜູ້ທີ່ເຕັມໃຈຮັບເອົາພຣະທຳຂອງພຣະອົງໄປປະຕິບັດ ແລະ ສາມາດຢືນຢູ່ຂ້າງຄວາມຈິງຢ່າງແທ້ຈິງ. ຜູ້ຄົນທີ່ອາໄສເລ່ກົນ ແລະ ຄວາມບໍ່ຍຸຕິທຳແມ່ນລ້ວນແລ້ວແຕ່ຂາດຄວາມຈິງ ແລະ ພວກເຂົານຳເອົາຄວາມອັບອາຍມາສູ່ພຣະເຈົ້າ. ຜູ້ທີ່ສ້າງຄວາມຂັດແຍ້ງໃນຄຣິສຕະຈັກແມ່ນຜູ້ຮັບໃຊ້ຂອງຊາຕານ, ພວກເຂົາແມ່ນຕົວຕົນຂອງຊາຕານ. ຄົນດັ່ງກ່າວແມ່ນຊົ່ວຮ້າຍຫຼາຍ. ຜູ້ທີ່ບໍ່ມີຄວາມສາມາດໃນການຕັດສິນໃຈທີ່ດີ ແລະ ບໍ່ສາມາດຢືນຢູ່ຂ້າງຄວາມຈິງລ້ວນແລ້ວແຕ່ເຊື່ອງເຈດຕະນາທີ່ຊົ່ວຮ້າຍໄວ້ ແລະ ທຳລາຍຄວາມຈິງ. ຍິ່ງໄປກວ່ານັ້ນ, ພວກເຂົາເປັນຕົວແທນຂອງຊາຕານໂດຍທາດແທ້. ພວກເຂົາແມ່ນເກີນກວ່າທີ່ຈະໄຖ່ບາບໄດ້ ແລະ ກໍຈະຖືກກຳຈັດໂດຍທຳມະຊາດ. ຄອບຄົວຂອງພຣະເຈົ້າບໍ່ອະນຸຍາດໃຫ້ຜູ້ຄົນເຫຼົ່າທີ່ບໍ່ປະຕິບັດຄວາມຈິງຍັງຄົງເຫຼືອຢູ່ ຫຼື ບໍ່ອະນຸຍາດໃຫ້ຜູ້ຄົນທີ່ຮື້ມ້າງຄຣິສຕະຈັກໂດຍເຈດຕະນາຄົງເຫຼືອຢູ່. ຢ່າງໃດກໍຕາມ, ຕອນນີ້ບໍ່ແມ່ນເວລາທີ່ຈະເຮັດພາລະກິດຂັບໄລ່; ໃນທີ່ສຸດ ຜູ້ຄົນດັ່ງກ່າວແມ່ນຈະຖືກເປີດໂປງ ແລະ ກຳຈັດຢູ່ດີ. ຈະບໍ່ມີການເຮັດພາລະກິດທີ່ບໍ່ມີປະໂຫຍດກັບຄົນເຫຼົ່ານີ້; ຜູ້ທີ່ເປັນຄົນຂອງຊາຕານບໍ່ສາມາດຢືນຢູ່ຂ້າງຄວາມຈິງໃນຂະນະທີ່ຜູ້ທີ່ສະແຫວງຫາຄວາມຈິງຈະສາມາດຢືນຢູ່ຂ້າງຄວາມຈິງໄດ້. ຜູ້ຄົນທີ່ບໍ່ປະຕິບັດຄວາມຈິງບໍ່ຄູ່ຄວນທີ່ຈະໄດ້ຍິນວິທີທາງແຫ່ງຄວາມຈິງ ແລະ ບໍ່ຄູ່ຄວນໃນການເປັນພະຍານຕໍ່ຄວາມຈິງ. ຄວາມຈິງບໍ່ແມ່ນມີໄວ້ເພື່ອຫູຂອງພວກເຂົາຟັງເທົ່ານັ້ນ; ໃນທາງກົງກັນຂ້າມ, ມັນແມ່ນມີໄວ້ເພື່ອໃຫ້ຄົນທີ່ປະຕິບັດຄວາມຈິງ. ກ່ອນທີ່ຈຸດຈົບຂອງທຸກຄົນຈະຖືກເປີດເຜີຍ, ຜູ້ທີ່ລົບກວນຄຣິສຕະຈັກ ແລະ ຂັດຂວາງພາລະກິດຂອງພຣະເຈົ້າ ຕອນນີ້ ແມ່ນຈະຖືກຈັດແຈງໄວ້ທາງຂ້າງກ່ອນ ເພື່ອຈະໄດ້ຈັດການພວກເຂົານຳພາຍຫຼັງ. ເມື່ອພາລະກິດສຳເລັດແລ້ວ, ຜູ້ຄົນເຫຼົ່ານີ້ຈະຖືກເປີດໂປງເທື່ອລະຄົນ ແລະ ຫຼັງຈາກນັ້ນກໍຈະຖືກກຳຈັດ. ສຳລັບຕອນນີ້, ພວກເຂົາຈະຖືກເບິ່ງຂ້າມໄປກ່ອນ ໃນຂະນະທີ່ມີການສະໜອງຄວາມຈິງ. ເມື່ອຄວາມຈິງທັງໝົດຖືກເປີດເຜີຍຕໍ່ມວນມະນຸດແລ້ວ, ຜູ້ຄົນເຫຼົ່ານັ້ນຈະໄດ້ຖືກກຳຈັດ; ນັ້ນຈະເປັນເວລາທີ່ທຸກຄົນຈະຖືກຈັດແບ່ງຕາມປະເພດຂອງພວກເຂົາ. ເນື່ອງຈາກຄວາມສະຫຼາດໜ້ອຍດຽວຂອງພວກເຂົາ, ຜູ້ທີ່ບໍ່ມີຄວາມສາມາດໃນການຕັດສິນທີ່ດີຈະພິນາດດ້ວຍມືຂອງຄົນທີ່ຊົ່ວຮ້າຍ, ພວກເຂົາຈະຖືກຫຼອກລວງອອກໄປໂດຍຄົນຊົ່ວຮ້າຍນັ້ນ ເຊິ່ງຈະບໍ່ສາມາດກັບຄືນມາໄດ້. ການປະຕິບັດດັ່ງກ່າວຄືສິ່ງທີ່ພວກເຂົາສົມຄວນໄດ້ຮັບ ຍ້ອນວ່າ ພວກເຂົາບໍ່ຮັກຄວາມຈິງ, ຍ້ອນວ່າພວກເຂົາບໍ່ສາມາດຢືນຢູ່ຂ້າງຄວາມຈິງ, ຍ້ອນວ່າ ພວກເຂົາຕິດຕາມຄົນທີ່ຊົ່ວຮ້າຍ ແລະ ຢືນຢູ່ຂ້າງຄົນທີ່ຊົ່ວຮ້າຍ ແລະ ຍ້ອນວ່າ ພວກເຂົາສົມຮູ້ຮ່ວມຄິດກັບຄົນທີ່ຊົ່ວຮ້າຍ ແລະ ຕໍ່ຕ້ານພຣະເຈົ້າ. ພວກເຂົາຮູ້ດີວ່າ ຜູ້ຄົນທີ່ຊົ່ວຮ້າຍເຫຼົ່ານັ້ນແຜ່ລັດສະໝີຂອງຄວາມຊົ່ວຮ້າຍ ແຕ່ພວກເຂົາເຮັດໃຫ້

ຫົວໃຈຂອງພວກເຂົາແຂງກະດ້າງ ແລະ ຫັນຫຼັງຂອງພວກເຂົາໃຫ້ກັບຄວາມຈິງທີ່ຕິດຕາມພວກເຂົາ. ຜູ້ຄົນເຫຼົ່ານີ້ທີ່ບໍ່ປະຕິບັດຄວາມຈິງ ແຕ່ເຮັດໃນສິ່ງທີ່ກໍ່ເກີດຄວາມພິນາດ ແລະ ໜ້າກຽດຊັງ ແມ່ນບໍ່ໄດ້ເຮັດໃນສິ່ງທີ່ຊົ່ວຮ້າຍບໍ? ເຖິງແມ່ນວ່າ ຈະມີຄົນເຫຼົ່ານັ້ນໃນທ່າມກາງພວກເຂົາທີ່ເອີ້ນໂຕເອງວ່າພະລາຊາ ແລະ ຜູ້ອື່ນທີ່ຕິດຕາມພວກເຂົາ ແຕ່ທຳມະຊາດຂອງພວກເຂົາທີ່ຕໍ່ຕ້ານພຣະເຈົ້າບໍ່ຄືກັນທັງໝົດບໍ? ພວກເຂົາສາມາດມີຂໍ້ອ້າງຫຍັງ ເພື່ອອ້າງວ່າ ພຣະເຈົ້າບໍ່ຊ່ວຍໃຫ້ພວກເຂົາລອດພົ້ນ? ພວກເຂົາສາມາດມີຂໍ້ອ້າງຫຍັງ ເພື່ອອ້າງວ່າ ພຣະເຈົ້າບໍ່ຊອບທຳ? ມັນບໍ່ແມ່ນຄວາມຊົ່ວຮ້າຍຂອງພວກເຂົາເອງບໍ ທີ່ທຳລາຍພວກເຂົາ? ບໍ່ແມ່ນຄວາມກະບົດຂອງພວກເຂົາບໍ ທີ່ດຶງພວກເຂົາລົງໄປສູ່ນະຮົກ? ໃນທີ່ສຸດ ຜູ້ຄົນທີ່ປະຕິບັດຄວາມຈິງຈະຖືກຊ່ວຍໃຫ້ລອດພົ້ນ ແລະ ເຮັດໃຫ້ສົມບູນຍ້ອນຄວາມຈິງ. ໃນທີ່ສຸດ ຜູ້ທີ່ບໍ່ປະຕິບັດຄວາມຈິງຈະດຶງຄວາມພິນາດມາສູ່ພວກເຂົາຍ້ອນຄວາມຈິງ. ສິ່ງເຫຼົ່ານີ້ແມ່ນຈຸດຈົບທີ່ລໍຖ້າຜູ້ທີ່ປະຕິບັດຄວາມຈິງ ແລະ ຜູ້ທີ່ບໍ່ປະຕິບັດຄວາມຈິງ. ເຮົາຂໍແນະນຳຜູ້ທີ່ບໍ່ມີແຜນປະຕິບັດຄວາມຈິງໃຫ້ອອກຈາກຄຣິສຕະຈັກໄວທີ່ສຸດເທົ່າທີ່ຈະໄວໄດ້ ເພື່ອຫຼີກເວັ້ນການເຮັດບາບຫຼາຍກວ່ານີ້. ເມື່ອເວລານັ້ນມາເຖິງ, ມັນກໍຈະຊ້າເກີນໄປທີ່ຈະເສຍໃຈ. ໂດຍສະເພາະ ຜູ້ທີ່ສ້າງພັກສ້າງພວກ ແລະ ສ້າງຄວາມແຕກແຍກ ແລະ ຄົນພາຍໃນຄຣິສຕະຈັກທີ່ມັກຂົ່ມເຫັງຄົນອື່ນຕ້ອງໜີອອກໄປໄວໆ. ຜູ້ຄົນດັ່ງກ່າວທີ່ມີທາດແທ້ຂອງໝາປ່າທີ່ຊົ່ວຮ້າຍແມ່ນບໍ່ສາມາດປ່ຽນແປງໄດ້. ມັນຈະດີກວ່າຖ້າພວກເຂົາອອກຈາກຄຣິສຕະຈັກໃຫ້ໄວທີ່ສຸດ ໂດຍທີ່ບໍ່ລົບກວນຊີວິດປົກກະຕິຂອງອ້າຍເອື້ອຍນ້ອງອີກຕໍ່ໄປ ແລະ ດ້ວຍເຫດນັ້ນ ກໍເປັນການຫຼີກເວັ້ນການລົງໂທດຂອງພຣະເຈົ້າ. ພວກເຈົ້າທີ່ເຫັນດີນຳພວກເຂົາຄວນຖືເອົາໂອກາດນີ້ທົບທວນເບິ່ງຕົວເອງ ເພາະມັນຈະເປັນຜົນດີສຳລັບພວກເຈົ້າເອງ. ພວກເຈົ້າທີ່ຕິດຕາມໄປກັບພວກເຂົາກໍເຮັດໃຫ້ດີໃນການໃຊ້ປະໂຫຍດຈາກໂອກາດນີ້ເພື່ອໄຕ່ຕອງກ່ຽວກັບຕົນເອງ. ເຈົ້າຈະອອກຈາກຄຣິສຕະຈັກພ້ອມກັບຄົນຊົ່ວຮ້າຍ ຫຼື ຈະຍັງຢູ່ ແລະ ຕິດຕາມຢ່າງເຊື່ອຟັງບໍ? ເຈົ້າຕ້ອງພິຈາລະນາເລື່ອງນີ້ໃຫ້ດີ. ເຮົາຂໍມອບໂອກາດນີ້ໃຫ້ພວກເຈົ້າເລືອກອີກຄັ້ງ; ແລ້ວເຮົາຈະລໍຖ້າຄຳຕອບຂອງພວກເຈົ້າ.

# ເຈົ້າຄວນຮັກສາຄວາມອຸທິດຂອງເຈົ້າຕໍ່ພຣະເຈົ້າໄວ້

ໃນປັດຈຸບັນນີ້ ພຣະວິນຍານບໍລິສຸດປະຕິບັດພາລະກິດຢູ່ໃນແຕ່ລະຄຣິສຕະຈັກແນວໃດ? ເຈົ້າມີຄວາມເຂົ້າໃຈກ່ຽວກັບຄຳຖາມນີ້ບໍ? ຄວາມຫຍຸ້ງຍາກອັນຍິ່ງໃຫຍ່ທີ່ສຸດຂອງອ້າຍເອື້ອຍນ້ອງແມ່ນຫຍັງ? ພວກເຂົາຂາດເຂີນຫຍັງຫຼາຍທີ່ສຸດ? ປັດຈຸບັນນີ້, ມີບາງຄົນທີ່ຄິດດ້ານລົບ ໃນຂະນະທີ່ພວກເຂົາໄດ້ຮັບການທົດລອງ ແລະ ບາງຄົນໃນພວກເຂົາເຖິງກັບຕໍ່ວ່າ. ບາງຄົນບໍ່ກ້າວໄປຂ້າງໜ້າອີກ ຍ້ອນວ່າພຣະເຈົ້າໄດ້ກ່າວສຳເລັດແລ້ວ. ຜູ້ຄົນບໍ່ໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການເຊື່ອພຣະເຈົ້າ. ພວກເຂົາບໍ່ສາມາດດຳລົງຊີວິດຢູ່ຢ່າງເປັນອິດສະຫຼະ ແລະ ພວກເຂົາບໍ່ສາມາດຮັກສາຊີວິດຝ່າຍວິນຍານຂອງພວກເຂົາໄດ້. ມີບາງຄົນທີ່ປະຕິບັດຕາມ ແລະ ສະແຫວງຫາດ້ວຍຄວາມແຮງກ້າ ແລະ ເຕັມໃຈປະຕິບັດຕາມເມື່ອພຣະເຈົ້າເວົ້າ. ແຕ່ເມື່ອພຣະເຈົ້າບໍ່ເວົ້າ, ພວກເຂົາກໍບໍ່ກ້າວໄປຂ້າງໜ້າອີກຕໍ່ໄປ. ຜູ້ຄົນຍັງບໍ່ເຂົ້າໃຈໃຈຄວາມປະສົງຂອງພຣະເຈົ້າພາຍໃນຫົວໃຈຂອງພວກເຂົາ ແລະ ພວກເຂົາບໍ່ມີຄວາມຮັກທີ່ເກີດຂຶ້ນໂດຍທຳມະຊາດຕໍ່ພຣະເຈົ້າ; ໃນອະດີດພວກເຂົາໄດ້ຕິດຕາມພຣະເຈົ້າກໍຍ້ອນວ່າພວກເຂົາຖືກບັງຄັບ. ປັດຈຸບັນນີ້ ມີບາງຄົນທີ່ເບື່ອໜ່າຍກັບພາລະກິດຂອງພຣະເຈົ້າ. ແລ້ວຜູ້ຄົນດັ່ງກ່າວບໍ່ໄດ້ຕົກຢູ່ໃນອັນຕະລາຍບໍ? ມີຫຼາຍຄົນທີ່ຢູ່ໃນສະພາວະທີ່ພຽງແຕ່ໃຊ້ຊີວິດຮັບມືກັບບັນຫາ. ເຖິງແມ່ນວ່າພວກເຂົາກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ອະທິຖານຕໍ່ພຣະອົງ, ພວກເຂົາປະຕິບັດຢ່າງບໍ່ເຕັມໃຈ ແລະ ພວກເຂົາກໍບໍ່ມີແຮງຜັກດັນທີ່ພວກເຂົາເຄີຍມີ ແລະ ຄົນສ່ວນຫຼາຍບໍ່ສົນໃຈໃນພາລະກິດແຫ່ງການເຮັດໃຫ້ບໍລິສຸດ ແລະ ການເຮັດໃຫ້ສົມບູນແບບຂອງພຣະເຈົ້າ ແລະ ແນ່ນອນແລ້ວມັນຄືກັບວ່າ ພວກເຂົາບໍ່ເຄີຍມີແຮງຜັກດັນໃດເລີຍຈາກພາຍໃນທີ່ສະໝໍ່າສະເໝີ. ເມື່ອພວກເຂົາເອົາຊະນະການຝ່າຝືນ, ພວກເຂົາບໍ່ຮູ້ສຶກເປັນໜີ້ບຸນຄຸນຕໍ່ພຣະເຈົ້າ ຫຼື ພວກເຂົາບໍ່ຮູ້ສຶກເສຍໃຈເລີຍ. ພວກເຂົາບໍ່ໄດ້ສະແຫວງຫາຄວາມຈິງ ຫຼື ອອກຫ່າງຈາກຄຣິສຕະຈັກ ແລະ ກົງກັນຂ້າມ ພວກເຂົາສະແຫວງຫາພຽງແຕ່ຄວາມເພິ່ງພໍໃຈຊົ່ວຄາວເທົ່ານັ້ນ. ຄົນເຫຼົ່ານີ້ໂງ່ຈ້າຫຼາຍ ໂງ່ຈ້າທີ່ສຸດ! ເມື່ອເວລາມາເຖິງ, ພວກເຂົາທັງໝົດຈະຖືກໄລ່ອອກ ແລະ ຈະບໍ່ມີໃຜລອດແມ່ນແຕ່ຄົນດຽວ! ເຈົ້າຄິດວ່າ ຖ້າບາງຄົນໄດ້ຖືກຊ່ວຍໃຫ້ລອດພົ້ນຄັ້ງໜຶ່ງແລ້ວ ພວກເຂົາຈະຖືກຊ່ວຍໃຫ້ລອດພົ້ນສະເໝີໄປບໍ? ຄວາມເຊື່ອນີ້ເປັນພຽງການຫຼອກລວງລ້ວນໆ! ບັນດາຜູ້ທີ່ບໍ່ສະແຫວງຫາການເຂົ້າສູ່ຊີວິດທັງໝົດຈະຖືກຕີສອນ. ຫຼາຍຄົນບໍ່ມີຄວາມສົນໃຈຢ່າງແນ່ນອນໃນການເຂົ້າສູ່ຊີວິດ, ໃນນິມິດ ຫຼື ໃນການນຳເອົາຄວາມຈິງເຂົ້າສູ່ການປະຕິບັດ. ພວກເຂົາບໍ່ສະແຫວງຫາການເຂົ້າເຖິງ ແລະ ແນ່ນອນ ພວກເຂົາຈະບໍ່ສະແຫວງຫາການເຂົ້າເຖິງຢ່າງເລິກເຊິ່ງກວ່ານີ້ອີກ. ບໍ່ແມ່ນພວກເຂົາກຳລັງທຳລາຍຕົວເອງບໍ? ປັດຈຸບັນນີ້, ມີຄົນຈຳນວນໜຶ່ງທີ່ມີເງື່ອນໄຂດີຂຶ້ນເລື້ອຍໆ. ຍິ່ງພຣະວິນຍານບໍລິສຸດປະຕິບັດພາລະກິດຫຼາຍເທົ່າໃດ ພວກເຂົາຍິ່ງມີຄວາມໝັ້ນໃຈຫຼາຍຂຶ້ນເທົ່ານັ້ນ ແລະ ຍິ່ງພວກເຂົາມີປະສົບການຫຼາຍເທົ່າໃດ ພວກເຂົາຍິ່ງຮູ້ສຶກເຖິງຄວາມເລິກລັບອັນເລິກເຊິ່ງແຫ່ງພາລະກິດຂອງພຣະເຈົ້າຫຼາຍຂຶ້ນເທົ່ານັ້ນ. ຍິ່ງພວກເຂົາເຂົ້າເຖິງເລິກເທົ່າໃດ, ພວກເຂົາຍິ່ງເຂົ້າໃຈຫຼາຍຂຶ້ນເທົ່ານັ້ນ. ພວກເຂົາຮູ້ສຶກວ່າ ຄວາມຮັກ

ຂອງພຣະເຈົ້ານັ້ນຍິ່ງໃຫຍ່ຫຼາຍ, ພວກເຂົາຮູ້ສຶກໝັ້ນຄົງ ແລະ ໄດ້ຮັບແສງສະຫວ່າງຢູ່ພາຍໃນພວກເຂົາເອງ. ພວກເຂົາມີຄວາມເຂົ້າໃຈກ່ຽວກັບພາລະກິດຂອງພຣະເຈົ້າ. ຜູ້ຄົນເຫຼົ່ານີ້ຄືຄົນທີ່ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດຕໍ່. ບາງຄົນເວົ້າວ່າ "ເຖິງແມ່ນວ່າບໍ່ມີພຣະທຳໃໝ່ຈາກພຣະເຈົ້າ, ຂ້ານ້ອຍຍັງຕ້ອງໄດ້ສະແຫວງຫາເພື່ອເຂົ້າເຖິງຄວາມຈິງໃຫ້ເລິກເຊິ່ງກວ່າເກົ່າ, ຂ້ານ້ອຍຕ້ອງຈິງຈັງກັບທຸກໆສິ່ງໃນປະສົບການຕົວຈິງຂອງຂ້ານ້ອຍ ແລະ ເຂົ້າສູ່ຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ". ຄົນປະເພດນີ້ມີພາລະກິດຂອງພຣະວິນຍານບໍລິສຸດ. ເຖິງແມ່ນວ່າພຣະເຈົ້າບໍ່ໄດ້ສະແດງໃບໜ້າຂອງພຣະອົງ ແລະ ປິດບັງຈາກທຸກຄົນ ແລະ ພຣະອົງບໍ່ໄດ້ກ່າວພຣະທຳໃດໆ ແລະ ມີຫຼາຍຄັ້ງທີ່ຜູ້ຄົນປະສົບກັບການເຮັດໃຫ້ບໍລິສຸດພາຍໃນ, ແຕ່ພຣະເຈົ້າກໍບໍ່ໄດ້ຫຼົບໜີຈາກຜູ້ຄົນໂດຍສິ້ນເຊີງ. ຖ້າຜູ້ຄົນບໍ່ສາມາດຮັກສາຄວາມຈິງທີ່ພວກເຂົາຄວນປະຕິບັດ, ພວກເຂົາກໍຈະບໍ່ມີພາລະກິດຂອງພຣະວິນຍານບໍລິສຸດ. ໃນຊ່ວງໄລຍະຂອງການເຮັດໃຫ້ບໍລິສຸດ, ໄລຍະທີ່ພຣະເຈົ້າບໍ່ສະແດງຕົວຕົນ, ຖ້າເຈົ້າບໍ່ມີຄວາມໝັ້ນໃຈ ແຕ່ກົງກັນຂ້າມ ທໍ້ຖອຍໄປ, ຖ້າເຈົ້າບໍ່ສຸມໃສ່ການປະສົບພຣະທຳຂອງພຣະອົງ, ເຈົ້າກໍກຳລັງຫຼົບໜີຈາກພາລະກິດຂອງພຣະເຈົ້າ. ຫຼັງຈາກນັ້ນ, ເຈົ້າກໍຈະເປັນໜຶ່ງໃນຜູ້ຄົນເຫຼົ່ານັ້ນທີ່ຖືກໄລ່ອອກໄປ. ບັນດາຜູ້ທີ່ບໍ່ສະແຫວງຫາເພື່ອເຂົ້າເຖິງພຣະທຳຂອງພຣະເຈົ້າ ບໍ່ສາມາດຢືນເປັນພະຍານໃຫ້ພຣະອົງໄດ້. ຄົນທີ່ສາມາດເປັນພະຍານໃຫ້ພຣະເຈົ້າ ແລະ ເຮັດຕາມຄວາມປະສົງຂອງພຣະອົງນັ້ນລ້ວນແຕ່ຕ້ອງໄດ້ເພິ່ງພາແຮງຜັກດັນຂອງພວກເຂົາເພື່ອສະແຫວງຫາພຣະທຳຂອງພຣະເຈົ້າ. ພາລະກິດທີ່ພຣະເຈົ້າປະຕິບັດໃນຜູ້ຄົນ ຕົ້ນຕໍແລ້ວແມ່ນເພື່ອໃຫ້ພວກເຂົາໄດ້ຮັບຄວາມຈິງ; ການທີ່ເຈົ້າສະແຫວງຫາຊີວິດ ນັ້ນກໍເພື່ອເຮັດໃຫ້ຕົວເຈົ້າເອງສົມບູນແບບ ແລະ ທັງໝົດນັ້ນແມ່ນເພື່ອເຮັດໃຫ້ເຈົ້າເໝາະສົມສຳລັບການນຳໃຊ້ຂອງພຣະເຈົ້າ. ທັງໝົດທີ່ເຈົ້າກຳລັງສະແຫວງຫາຢູ່ຕອນນີ້ ແມ່ນການໄດ້ຍິນຄວາມເລິກລັບຕ່າງໆ, ການຟັງພຣະທຳຂອງພຣະເຈົ້າ, ການລ້ຽງດວງຕາຂອງເຈົ້າ ແລະ ການແຍງເບິ່ງວ່າມີບາງສິ່ງໃຫມ່ ຫຼື ມີແນວໂນ້ມຫຍັງບໍ ແລະ ດ້ວຍເຫດນັ້ນ ຈຶ່ງສະໜອງຄວາມຢາກຮູ້ຢາກເຫັນຂອງເຈົ້າ. ຖ້ານີ້ແມ່ນຄວາມຕັ້ງໃຈໃນໃຈຂອງເຈົ້າ, ບໍ່ມີທາງທີ່ເຈົ້າຈະບັນລຸຂໍ້ກຳນົດຂອງພຣະເຈົ້າໄດ້. ບັນດາຜູ້ທີ່ບໍ່ສະແຫວງຫາຄວາມຈິງບໍ່ສາມາດປະຕິບັດຕາມຈົນເຖິງທີ່ສຸດໄດ້. ປັດຈຸບັນນີ້, ບໍ່ແມ່ນວ່າພຣະເຈົ້າບໍ່ກະທຳບາງສິ່ງ ແຕ່ກົງກັນຂ້າມແມ່ນຜູ້ຄົນທີ່ບໍ່ຮ່ວມມືກັບພຣະອົງ, ຍ້ອນວ່າພວກເຂົາເບື່ອໜ່າຍກັບພາລະກິດຂອງພຣະເຈົ້າ. ພວກເຂົາຢາກໄດ້ຍິນພຣະທຳແຫ່ງການອວຍພອນຂອງພຣະອົງເທົ່ານັ້ນ ແລະ ພວກເຂົາບໍ່ປາດຖະໜາທີ່ຈະໄດ້ຍິນພຣະທຳແຫ່ງການພິພາກສາ ແລະ ການຕີສອນ. ແມ່ນຫຍັງຄືເຫດຜົນສຳລັບເລື່ອງນີ້? ກໍເຫດຜົນກໍຄືຄວາມປາດຖະໜາຂອງຄົນເພື່ອໄດ້ຮັບການອວຍພອນນັ້ນຍັງບໍ່ທັນໄດ້ຖືກບັນລຸ ແລະ ດັ່ງນັ້ນ ພວກເຂົາຈຶ່ງມີແນວຄິດລົບ ແລະ ອ່ອນແອອີກດ້ວຍ. ມັນບໍ່ແມ່ນວ່າພຣະເຈົ້າຕັ້ງໃຈບໍ່ອະນຸຍາດໃຫ້ຄົນຕິດຕາມພຣະອົງ ຫຼື ບໍ່ແມ່ນວ່າພຣະອົງຕັ້ງໃຈສົ່ງເຫດຮ້າຍມາສູ່ມະນຸດຊາດ. ຜູ້ຄົນມີແນວຄິດລົບ ແລະ ອ່ອນແອກໍຍ້ອນຄວາມຕັ້ງໃຈຂອງພວກເຂົາບໍ່ເໝາະສົມເທົ່ານັ້ນ. ພຣະເຈົ້າແມ່ນພຣະເຈົ້າທີ່ໃຫ້ຊີວິດແກ່ມະນຸດ ແລະ ພຣະອົງບໍ່ສາມາດນຳມະນຸດໄປສູ່ຄວາມຕາຍໄດ້. ການມີແນວຄິດລົບ, ຄວາມອ່ອນແອ ແລະ ການທໍ້ຖອຍຂອງຄົນ

ທັງໝົດນັ້ນລ້ວນແລ້ວແຕ່ເກີດຈາກການປະຕິບັດຂອງພວກເຂົາເອງ.

ພາລະກິດປັດຈຸບັນຂອງພຣະເຈົ້ານໍາເອົາການຫຼົ່ຫຼອມບາງຢ່າງມາສູ່ຜູ້ຄົນ ແລະ ມີພຽງບັນດາຜູ້ທີ່ສາມາດຕັ້ງໝັ້ນຢູ່ໃນການເຮັດໃຫ້ບໍລິສຸດນີ້ເທົ່ານັ້ນທີ່ຈະໄດ້ຮັບການຍອມຮັບຈາກພຣະເຈົ້າ. ບໍ່ວ່າພຣະອົງຈະປົກປິດຕົວພຣະອົງເອງແນວໃດກໍຕາມ, ບໍ່ວ່າຈະບໍ່ເວົ້າ ຫຼື ບໍ່ປະຕິບັດພາລະກິດ, ເຈົ້າຍັງສາມາດສະແຫວງຫາດ້ວຍຄວາມແຮງກ້າ. ເຖິງແມ່ນວ່າພຣະເຈົ້າໄດ້ເວົ້າວ່າພຣະອົງຈະປະຕິເສດເຈົ້າ, ເຈົ້າກໍຍັງຈະຕິດຕາມພຣະອົງຢູ່. ນີ້ແມ່ນການຢືນເປັນພະຍານໃຫ້ກັບພຣະເຈົ້າ. ຖ້າພຣະເຈົ້າປົກປິດພຣະອົງເອງຈາກເຈົ້າ ແລະ ເຈົ້າກໍຢຸດຕິດຕາມພຣະອົງ, ແລ້ວນີ້ແມ່ນການຢືນເປັນພະຍານໃຫ້ກັບພຣະເຈົ້າບໍ? ຖ້າຄົນບໍ່ເຂົ້າເຖິງຢ່າງແທ້ຈິງ, ພວກເຂົາກໍຈະບໍ່ມີວຸດທິພາວະທີ່ແທ້ຈິງ ແລະ ເມື່ອພວກເຂົາພົບກັບການທົດລອງຄັ້ງໃຫຍ່ຢ່າງແທ້ຈິງ, ພວກເຂົາກໍຈະສະດຸດ. ເມື່ອພຣະເຈົ້າບໍ່ໄດ້ກ່າວ ຫຼື ປະຕິບັດໃນສິ່ງທີ່ບໍ່ສອດຄ່ອງກັບແນວຄິດຂອງເຈົ້າ, ເຈົ້າກໍຈະບໍ່ເຫັນດີນໍາ. ຖ້າພຣະເຈົ້າປະຕິບັດຕາມແນວຄິດຂອງເຈົ້າໃນປັດຈຸບັນ, ຖ້າພຣະອົງເຮັດຕາມຄວາມປະສົງຂອງເຈົ້າ ແລະ ເຈົ້າສາມາດຢືນຂຶ້ນ ແລະ ສະແຫວງຫາດ້ວຍຄວາມແຮງກ້າ, ແລ້ວແມ່ນຫຍັງຈະເປັນພື້ນຖານທີ່ເຈົ້າດໍາລົງຊີວິດຢູ່? ເຮົາເວົ້າວ່າມີຫຼາຍຄົນທີ່ດໍາລົງຊີວິດຢູ່ດ້ວຍການອາໄສຄວາມຢາກຮູ້ຢາກເຫັນຂອງມະນຸດທັງໝົດ. ພວກເຂົາບໍ່ມີມັນໃນຫົວໃຈອັນແທ້ຈິງແຫ່ງການສະແຫວງຫາຢ່າງແນ່ນອນ. ບັນດາຜູ້ທີ່ບໍ່ສະແຫວງຫາການເຂົ້າສູ່ຄວາມຈິງ ແຕ່ອາໄສຄວາມຢາກຮູ້ຢາກເຫັນໃນຊີວິດຂອງພວກເຂົາ ແມ່ນເປັນຄົນໜ້າລັງກຽດ ແລະ ພວກເຂົາກໍຕົກຢູ່ໃນອັນຕະລາຍ! ພາລະກິດຫຼາກຫຼາຍປະເພດຂອງພຣະເຈົ້າຖືກປະຕິບັດທັງໝົດແມ່ນເພື່ອເຮັດໃຫ້ມະນຸດຊາດສົມບູນແບບ. ແນວໃດກໍຕາມ, ຄົນກໍຢາກຮູ້ຢາກເຫັນຢູ່ສະເໝີ, ພວກເຂົາມັກສອບຖາມກ່ຽວກັບຂ່າວລື, ພວກເຂົາກັງວົນກ່ຽວກັບສິ່ງທີ່ກໍາລັງເກີດຂຶ້ນໃນຕ່າງແດນ, ຍົກຕົວຢ່າງ: ມີຫຍັງກໍາລັງເກີດຂຶ້ນຢູ່ປະເທດອິດສະລາເອັນ ຫຼື ຖ້າມີແຜ່ນດິນໄຫວເກີດຂຶ້ນຢູ່ປະເທດອີຢິບ ພວກເຂົາກໍຈະຊອກຫາສິ່ງແປກໃຫມ່ຢູ່ສະເໝີ ເພື່ອຕອບສະໜອງຄວາມປາດຖະໜາທີ່ເຫັນແກ່ຕົວຂອງພວກເຂົາ. ພວກເຂົາບໍ່ໄດ້ສະແຫວງຫາຊີວິດ ຫຼື ສະແຫວງຫາເພື່ອຖືກເຮັດໃຫ້ສົມບູນແບບ. ພວກເຂົາພຽງສະແຫວງຫາໃຫ້ວັນຂອງພຣະເຈົ້າມາເຖິງໄວໆ ເພື່ອວ່າຄວາມຝັນອັນງົດງາມຂອງພວກເຂົາອາດຈະກາຍເປັນຈິງ ແລະ ຄວາມປາດຖະໜາເກີນເຫດຜົນຂອງພວກເຂົາຈະໄດ້ບັນລຸຜົນ. ຄົນປະເພດນັ້ນບໍ່ແມ່ນຄົນທີ່ມີເຫດຜົນ, ພວກເຂົາເປັນຄົນທີ່ມີມຸມມອງທີ່ບໍ່ເໝາະສົມ. ມີພຽງການສະແຫວງຫາຄວາມຈິງແມ່ນຮາກຖານຂອງການເຊື່ອໃນພຣະເຈົ້າຂອງມວນມະນຸດ ແລະ ຖ້າຄົນບໍ່ສະແຫວງຫາການເຂົ້າສູ່ຊີວິດ, ຖ້າພວກເຂົາບໍ່ສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າພໍໃຈແລ້ວ, ພວກເຂົາກໍຈະຖືກລົງໂທດ. ບັນດາຜູ້ທີ່ຖືກລົງໂທດແມ່ນບັນດາຜູ້ທີ່ບໍ່ທັນມີພາລະກິດຂອງພຣະວິນຍານບໍລິສຸດໃນຊ່ວງເວລາແຫ່ງການປະຕິບັດພາລະກິດຂອງພຣະເຈົ້າ.

ຜູ້ຄົນຄວນຮ່ວມມືກັບພຣະເຈົ້າໃນຂັ້ນຕອນນີ້ຂອງພາລະກິດຂອງພຣະອົງແນວໃດ? ປັດຈຸບັນນີ້ພຣະເຈົ້າກໍາລັງທົດສອບມະນຸດຢູ່. ພຣະອົງບໍ່ໄດ້ກ່າວພຣະທໍາໃດໆ ແຕ່ກໍາລັງປົກປິດພຣະອົງເອງຢູ່ ແລະ ບໍ່ໄດ້ຕິດຕໍ່ກັບຄົນໂດຍກົງ. ຈາກພາຍນອກ, ເບິ່ງຄືກັບວ່າພຣະອົງບໍ່ໄດ້ປະຕິບັດພາລະກິດ,

ແຕ່ຄວາມຈິງຄື ພຣະອົງກຳລັງປະຕິບັດພາລະກິດໃນຕົວມະນຸດຢູ່. ທຸກຄົນທີ່ກຳລັງສະແຫວງຫາການເຂົ້າສູ່ຊີວິດແມ່ນມີນິມິດສຳລັບການສະແຫວງຫາຊີວິດຂອງພວກເຂົາ ແລະ ເຖິງແມ່ນວ່າພວກເຂົາບໍ່ທັນເຂົ້າໃຈຢ່າງແຈ່ມແຈ້ງກ່ຽວກັບພາລະກິດຂອງພຣະເຈົ້າ ພວກເຂົາກໍບໍ່ມີຄວາມສົງໄສ. ເມື່ອໄດ້ຮັບການທົດລອງ, ເຖິງແມ່ນວ່າ ເມື່ອເຈົ້າບໍ່ຮູ້ວ່າພຣະເຈົ້າຕ້ອງການກະທຳສິ່ງໃດ ແລະ ພາລະກິດໃດທີ່ພຣະອົງຕ້ອງເຮັດໃຫ້ສຳເລັດ, ເຈົ້າຄວນຮູ້ວ່າຄວາມຕັ້ງໃຈຂອງພຣະເຈົ້າເພື່ອມວນມະນຸດນັ້ນດີສະເໝີ. ຖ້າເຈົ້າສະແຫວງຫາພຣະອົງດ້ວຍໃຈຈິງ, ພຣະອົງກໍຈະບໍ່ມີວັນປະຖິ້ມເຈົ້າ ແລະ ໃນທີ່ສຸດພຣະອົງຈະເຮັດໃຫ້ເຈົ້າສົມບູນແບບຢ່າງແນ່ນອນ ແລະ ນຳຜູ້ຄົນໄປຍັງຈຸດໝາຍປາຍທາງທີ່ເໝາະສົມ. ປັດຈຸບັນນີ້ ບໍ່ວ່າພຣະເຈົ້າກຳລັງທົດສອບມະນຸດແນວໃດກໍຕາມ, ຈະມີວັນໜຶ່ງເມື່ອພຣະອົງສະໜອງຜົນໄດ້ຮັບທີ່ເໝາະສົມໃຫ້ແກ່ຄົນ ແລະ ໃຫ້ການຕອບແທນທີ່ເໝາະສົມແກ່ພວກເຂົາຕາມສິ່ງທີ່ພວກເຂົາໄດ້ເຮັດ. ພຣະເຈົ້າຈະບໍ່ນຳພາຄົນໄປເຖິງຈຸດໃດໜຶ່ງ ແລະ ຈາກນັ້ນກໍໄລ່ເຂົາອອກໄປທາງຂ້າງ ແລະ ບໍ່ຮັບຮູ້ພວກເຂົາ. ນີ້ກໍຍ້ອນວ່າພຣະອົງແມ່ນພຣະເຈົ້າອົງຊື່ສັດ. ໃນຂັ້ນຕອນນີ້, ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດແຫ່ງການເຮັດໃຫ້ບໍລິສຸດຢູ່. ພຣະອົງກຳລັງເຮັດໃຫ້ທຸກຄົນບໍລິສຸດ. ໃນບາດກ້າວແຫ່ງພາລະກິດຂອງການທົດລອງກ່ຽວກັບຄວາມຕາຍ ແລະ ການທົດລອງກ່ຽວກັບການຕີສອນ, ການເຮັດໃຫ້ບໍລິສຸດຖືກປະຕິບັດຜ່ານທາງພຣະທຳ. ເພື່ອໃຫ້ຄົນໄດ້ປະສົບກັບພາລະກິດຂອງພຣະເຈົ້າ, ກ່ອນອື່ນໝົດ ພວກເຂົາຕ້ອງເຂົ້າໃຈພາລະກິດປັດຈຸບັນຂອງພຣະອົງ ແລະ ເຂົ້າໃຈວ່າມະນຸດຊາດຄວນຮ່ວມມືແນວໃດ. ແທ້ທີ່ຈິງແລ້ວ ນີ້ແມ່ນສິ່ງທີ່ທຸກຄົນຄວນເຂົ້າໃຈ. ບໍ່ວ່າພຣະເຈົ້າກະທຳສິ່ງໃດ, ບໍ່ວ່າເປັນການເຮັດໃຫ້ບໍລິສຸດ ຫຼື ການທີ່ພຣະອົງບໍ່ໄດ້ກ່າວ, ທຸກໆບາດກ້າວແຫ່ງພາລະກິດຂອງພຣະເຈົ້າແມ່ນບໍ່ສອດຄ່ອງກັບແນວຄວາມຄິດຂອງມະນຸດ. ແຕ່ລະບາດກ້າວຂອງພາລະກິດຂອງພຣະອົງຖືກແບ່ງອອກເປັນຫຼາຍພາກສ່ວນ ແລະ ທະລຸແນວຄວາມຄິດຂອງຄົນ. ນີ້ແມ່ນພາລະກິດຂອງພຣະອົງ. ແຕ່ເຈົ້າຕ້ອງເຊື່ອວ່າ ຍ້ອນພາລະກິດຂອງພຣະເຈົ້າມາເຖິງຂັ້ນຕອນໃດໜຶ່ງ, ບໍ່ວ່າສິ່ງໃດກໍຕາມ ພຣະອົງຈະບໍ່ຂ້າມະນຸດທັງໝົດໃຫ້ຕາຍ. ພຣະອົງມອບທັງຄຳສັນຍາ ແລະ ພອນໃຫ້ແກ່ມະນຸດຊາດ ແລະ ບັນດາຜູ້ທີ່ສະແຫວງຫາພຣະອົງທັງໝົດຈະສາມາດໄດ້ຮັບພອນຂອງພຣະອົງ ແລະ ສຳລັບບັນດາຜູ້ທີ່ບໍ່ສະແຫວງຫາພຣະອົງຈະຖືກພຣະເຈົ້າໂຍນອອກ. ສິ່ງນີ້ແມ່ນຂຶ້ນຢູ່ກັບການສະແຫວງຫາຂອງເຈົ້າ. ບໍ່ວ່າສິ່ງໃດກໍຕາມ, ເຈົ້າຕ້ອງເຊື່ອວ່າເມື່ອພາລະກິດຂອງພຣະເຈົ້າສິ້ນສຸດລົງ, ທຸກຄົນກໍຈະມີຈຸດໝາຍປາຍທາງທີ່ເໝາະສົມ. ພຣະເຈົ້າໄດ້ສະໜອງແຮງບັນດານໃຈອັນງົດງາມໃຫ້ແກ່ມວນມະນຸດ, ແຕ່ຖ້າພວກເຂົາບໍ່ສະແຫວງຫາ, ພວກເຂົາກໍບໍ່ສາມາດບັນລຸພວກມັນໄດ້. ຕອນນີ້ເຈົ້າຄວນສາມາດເຫັນສິ່ງນີ້ໄດ້ແລ້ວ, ການເຮັດໃຫ້ບໍລິສຸດຂອງພຣະເຈົ້າ ແລະ ການຕີສອນຜູ້ຄົນແມ່ນພາລະກິດຂອງພຣະອົງ. ແຕ່ສຳລັບຜູ້ຄົນ, ຕ້ອງສະແຫວງຫາການປ່ຽນແປງອຸປະນິໄສຕະຫຼອດເວລາ. ໃນປະສົບການຕົວຈິງຂອງເຈົ້າ, ກ່ອນອື່ນໝົດ ເຈົ້າຕ້ອງຮູ້ວິທີກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ເຈົ້າຕ້ອງຊອກຫາພາຍໃນພຣະທຳຂອງພຣະອົງວ່າເຈົ້າຄວນເຂົ້າຫາສິ່ງໃດ ແລະ ຂໍ້ບົກຜ່ອງຂອງເຈົ້າເອງ, ເຈົ້າຄວນສະແຫວງຫາການເຂົ້າສູ່ປະສົບການຕົວຈິງຂອງເຈົ້າ ແລະ ນຳເອົາສ່ວນຂອງພຣະທຳຂອງ

ພຣະເຈົ້າທີ່ຄວນນຳເອົາໄປປະຕິບັດ ແລະ ພະຍາຍາມປະຕິບັດຕາມນັ້ນ. ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າແມ່ນດ້ານໜຶ່ງ. ນອກຈາກນັ້ນ ຊີວິດຂອງຄຣິສຕະຈັກກໍຕ້ອງໄດ້ຖືກຮັກສາໄວ້, ເຈົ້າຕ້ອງມີຊີວິດຝ່າຍວິນຍານທີ່ປົກກະຕິ ແລະ ເຈົ້າຕ້ອງສາມາດມອບສະຖານະປັດຈຸບັນທັງໝົດຂອງເຈົ້າໃຫ້ແກ່ພຣະເຈົ້າ. ບໍ່ວ່າພາລະກິດຂອງພຣະອົງຈະປ່ຽນແປງແນວໃດ, ຊີວິດຝ່າຍວິນຍານຂອງເຈົ້າຄວນຢູ່ໃນສະພາວະປົກກະຕິ. ຊີວິດຝ່າຍວິນຍານສາມາດຮັກສາການເຂົ້າເຖິງທີ່ເໝາະສົມຂອງເຈົ້າໄດ້. ບໍ່ວ່າພຣະເຈົ້າຈະກະທຳສິ່ງໃດ, ເຈົ້າຍັງຈະສາມາດດຳເນີນຊີວິດຝ່າຍວິນຍານຂອງເຈົ້າໄດ້ຢ່າງຕໍ່ເນື່ອງ ແລະ ບັນລຸໜ້າທີ່ຂອງເຈົ້າໄດ້. ນີ້ແມ່ນສິ່ງທີ່ຄົນຄວນປະຕິບັດ. ມັນແມ່ນພາລະກິດທັງໝົດຂອງພຣະວິນຍານບໍລິສຸດ, ແຕ່ສຳລັບບັນດາຜູ້ທີ່ມີເງື່ອນໄຂປົກກະຕິ ມັນແມ່ນການຖືກເຮັດໃຫ້ສົມບູນແບບ. ສຳລັບບັນດາຜູ້ທີ່ມີເງື່ອນໄຂບໍ່ປົກກະຕິ ມັນແມ່ນການທົດລອງ. ໃນຂັ້ນຕອນປັດຈຸບັນແຫ່ງພາລະກິດການເຮັດໃຫ້ບໍລິສຸດຂອງພຣະວິນຍານບໍລິສຸດ, ບາງຄົນເວົ້າວ່າພາລະກິດຂອງພຣະເຈົ້ານັ້ນຍິ່ງໃຫຍ່ຫຼາຍ ແລະ ຜູ້ຄົນຕ້ອງການການເຮັດໃຫ້ບໍລິສຸດຢ່າງຫຼວງຫຼາຍ, ບໍ່ດັ່ງນັ້ນ ວຸດທິພາວະຂອງພວກເຂົາກໍຈະຕໍ່າຫຼາຍ ແລະ ພວກເຂົາຈະບໍ່ມີທາງທີ່ຈະບັນລຸຄວາມປະສົງຂອງພຣະເຈົ້າໄດ້. ແນວໃດກໍຕາມ, ສຳລັບບັນດາຜູ້ມີເງື່ອນໄຂທີ່ບໍ່ດີ, ມັນກາຍເປັນເຫດຜົນທີ່ຈະບໍ່ສະແຫວງຫາພຣະເຈົ້າ ແລະ ເປັນເຫດຜົນທີ່ຈະບໍ່ເຂົ້າຮ່ວມການຊຸມນຸມ ຫຼື ກິນ ແລະ ດື່ມ ພຣະທຳຂອງພຣະເຈົ້າ. ໃນພາລະກິດຂອງພຣະເຈົ້າ, ບໍ່ວ່າພຣະອົງກະທຳສິ່ງໃດ ຫຼື ການປ່ຽນແປງໃດທີ່ພຣະອົງສົ່ງຜົນກະທົບ, ຜູ້ ຄົນຕ້ອງຮັກສາພື້ນຖານຂອງຊີວິດຝ່າຍວິນຍານປົກກະຕິໄວ້. ບາງທີເຈົ້າອາດບໍ່ເຄີຍຜ່ອນຜັນໃນຊ່ວງເວລາປັດຈຸບັນນີ້ຂອງຊີວິດຝ່າຍວິນຍານຂອງເຈົ້າ, ແຕ່ເຈົ້າຍັງບໍ່ທັນໄດ້ຮັບຫຼາຍເທື່ອ ແລະ ຍັງບໍ່ທັນໄດ້ເກັບກ່ຽວຜົນປະໂຫຍດຫຼາຍປານໃດ. ພາຍໃຕ້ສະຖານະການເຫຼົ່ານີ້ ເຈົ້າຍັງຕ້ອງປະຕິບັດຕາມກົດ; ເຈົ້າຕ້ອງປະຕິບັດຕາມກົດເຫຼົ່ານີ້ເພື່ອທີ່ຈະບໍ່ຕ້ອງທົນທຸກກັບຄວາມສູນເສຍໃນຊີວິດຂອງເຈົ້າ ແລະ ເພື່ອວ່າເຈົ້າຈະໄດ້ເຮັດຕາມຄວາມປະສົງຂອງພຣະເຈົ້າ. ຖ້າຊີວິດຝ່າຍຈິດວິນຍານຂອງເຈົ້າບໍ່ປົກກະຕິ, ເຈົ້າກໍບໍ່ສາມາດເຂົ້າໃຈພາລະກິດປັດຈຸບັນຂອງພຣະເຈົ້າໄດ້ ແລະ ກົງກັນຂ້າມ ເຈົ້າຈະຮູ້ສຶກໄດ້ສະເໝີວ່າມັນເຂົ້າກັນບໍ່ໄດ້ກັບແນວຄິດຂອງຕົວເຈົ້າເອງ ແລະ ເຖິງແມ່ນວ່າເຈົ້າເຕັມໃຈທີ່ຈະຕິດຕາມພຣະອົງ, ແຕ່ເຈົ້າຂາດແຮງຜັກດັນພາຍໃນ. ດັ່ງນັ້ນ ບໍ່ວ່າພຣະເຈົ້າກຳລັງກະທຳສິ່ງໃດ, ຄົນກໍຕ້ອງຮ່ວມມື. ຖ້າຄົນບໍ່ຮ່ວມມື ພຣະວິນຍານບໍລິສຸດກໍບໍ່ສາມາດປະຕິບັດພາລະກິດຂອງພຣະອົງໄດ້ ແລະ ຖ້າຄົນບໍ່ມີຫົວໃຈທີ່ຈະຮ່ວມມື ແລ້ວພວກເຂົາກໍຍາກທີ່ຈະສາມາດໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດໄດ້. ຖ້າເຈົ້າຕ້ອງການໃຫ້ມີພາລະກິດຂອງພຣະວິນຍານບໍລິສຸດຢູ່ໃນຕົວເຈົ້າ ແລະ ຕ້ອງການໄດ້ຮັບການເຫັນດີຈາກພຣະເຈົ້າແລ້ວ, ເຈົ້າຕ້ອງຮັກສາຄວາມຈົງຮັກພັກດີດັ່ງເດີມຂອງເຈົ້າໄວ້ຢູ່ຕໍ່ໜ້າພຣະເຈົ້າ. ປັດຈຸບັນນີ້, ເຈົ້າບໍ່ຈຳເປັນຕ້ອງມີຄວາມເຂົ້າໃຈທີ່ເລິກເຊິ່ງຂຶ້ນ, ທິດສະດີທີ່ສູງຂຶ້ນ ຫຼື ສິ່ງອື່ນໆດັ່ງກ່າວ, ທັງໝົດທີ່ຕ້ອງການຄືໃຫ້ເຈົ້າຮັກສາພຣະທຳຂອງພຣະເຈົ້າໄວ້ບົນຮາກຖານເດີມ. ຖ້າຄົນບໍ່ຮ່ວມມືກັບພຣະເຈົ້າ ແລະ ບໍ່ສະແຫວງຫາການເຂົ້າເຖິງທີ່ເລິກເຊິ່ງຂຶ້ນກວ່າເກົ່າ, ພຣະເຈົ້າຈະເອົາສິ່ງທີ່ເຂົາເຄີຍມີນັ້ນໄປ. ຢູ່ພາຍໃນ, ຜູ້ຄົນມັກຈະໂລບມາກໂລພາຢູ່ສະເໝີເພື່ອຄວາມສະບາຍ ແລະ ຢາກຈະ

ຊື່ນຊົມກັບສິ່ງທີ່ມີຢູ່ແລ້ວ. ພວກເຂົາຕ້ອງການໄດ້ຮັບຄຳສັນຍາຂອງພຣະເຈົ້າໂດຍບໍ່ຕ້ອງຈ່າຍຄ່າໃດໆ ເລີຍ. ສິ່ງເຫຼົ່ານີ້ແມ່ນຄວາມຄິດທີ່ເກີນຂອບເຂດທີ່ມະນຸດຊາດເຮັດໃຫ້ບັນເທີງ. ການໄດ້ຮັບຊີວິດໂດຍ ບໍ່ຕ້ອງຈ່າຍຄ່າຫຍັງເລີຍ, ມີຫຍັງທີ່ເຄີຍງ່າຍປານນີ້ບໍ? ເມື່ອບາງຄົນເຊື່ອໃນພຣະເຈົ້າ ແລະ ສະແຫວງຫາ ເພື່ອເຂົ້າສູ່ຊີວິດ ແລະ ສະແຫວງຫາການປ່ຽນແປງອຸປະນິໄສຂອງພວກເຂົາ, ພວກເຂົາຕ້ອງຊົດໃຊ້ ແລະ ບັນລຸສະຖານະທີ່ພວກເຂົາຈະຕິດຕາມພຣະເຈົ້າສະເໝີ ບໍ່ວ່າພຣະອົງກະທຳສິ່ງໃດກໍຕາມ. ນີ້ແມ່ນສິ່ງທີ່ ຄົນຕ້ອງປະຕິບັດ. ເຖິງແມ່ນວ່າເຈົ້າປະຕິບັດຕາມທັງໝົດນີ້ຄືກັບກົດລະບຽບ, ເຈົ້າຕ້ອງຕັ້ງໝັ້ນຢູ່ກັບ ມັນ ແລະ ບໍ່ວ່າການທົດລອງນັ້ນຍິ່ງໃຫຍ່ພຽງໃດ, ເຈົ້າຈະບໍ່ສາມາດປ່ອຍປະລະເລີຍຄວາມສຳພັນ ປົກກະຕິຂອງເຈົ້າກັບພຣະເຈົ້າໄດ້. ເຈົ້າຄວນສາມາດອະທິຖານ, ຮັກສາຊີວິດຄຣິສຕະຈັກຂອງເຈົ້າ ແລະ ບໍ່ປະຖິ້ມອ້າຍເອື້ອຍນ້ອງຂອງເຈົ້າ. ເມື່ອພຣະເຈົ້າທົດສອບເຈົ້າ, ເຈົ້າຄວນສືບຕໍ່ສະແຫວງຫາຄວາມຈິງ. ນີ້ແມ່ນຂໍ້ກຳນົດຂັ້ນຕໍ່າສຸດສຳລັບຊີວິດຝ່າຍວິນຍານ. ມີຫົວໃຈທີ່ສະແຫວງຫາ ແລະ ພະຍາຍາມຮ່ວມມື ຢູ່ສະເໝີ, ໃຊ້ກຳລັງທັງໝົດຂອງເຈົ້າ, ສາມາດເຮັດສິ່ງນີ້ໄດ້ບໍ? ຖ້າຜູ້ຄົນນຳສິ່ງນີ້ເປັນພື້ນຖານ, ພວກເຂົາຈະສາມາດບັນລຸຄວາມສາມາດໃນການຕັດສິນທີ່ດີ ແລະ ການເຂົ້າສູ່ຄວາມເປັນຈິງ. ມັນງ່າຍ ທີ່ຈະຍອມຮັບພຣະທຳຂອງພຣະເຈົ້າເມື່ອສະຖານະຂອງຕົວເຈົ້ານັ້ນປົກກະຕິ; ໃນສະຖານະການເຫຼົ່ານີ້ ມັນບໍ່ໄດ້ຮູ້ສຶກຍາກທີ່ຈະປະຕິບັດຄວາມຈິງ ແລະ ເຈົ້າຮູ້ສຶກໄດ້ວ່າພາລະກິດຂອງພຣະເຈົ້ານັ້ນຍິ່ງໃຫຍ່. ແຕ່ຖ້າເງື່ອນໄຂຂອງເຈົ້ານັ້ນບໍ່ດີ, ບໍ່ວ່າພາລະກິດຂອງພຣະເຈົ້າຍິ່ງໃຫຍ່ພຽງໃດ ແລະ ບໍ່ວ່າບາງຄົນເວົ້າ ມ່ວນພຽງໃດ, ເຈົ້າກໍຈະບໍ່ຫົວຊາ. ເມື່ອເງື່ອນໄຂຂອງຄົນໆໜຶ່ງບໍ່ປົກກະຕິ, ພຣະເຈົ້າບໍ່ສາມາດ ປະຕິບັດພາລະກິດໃນຕົວພວກເຂົາໄດ້ ແລະ ພວກເຂົາກໍບໍ່ສາມາດບັນລຸການປ່ຽນແປງອຸປະນິໄສຂອງ ພວກເຂົາໄດ້.

ຖ້າຄົນບໍ່ມີຄວາມໝັ້ນໃຈໃດໆ, ມັນບໍ່ງ່າຍເລີຍສຳລັບພວກເຂົາທີ່ຈະຍ່າງໄປຕາມເສັ້ນທາງນີ້. ປັດຈຸບັນນີ້ ທຸກຄົນສາມາດເຫັນໄດ້ວ່າພາລະກິດຂອງພຣະເຈົ້າບໍ່ໄດ້ສອດຄ່ອງກັບແນວຄິດ ແລະ ຈິນຕະນາການຂອງຄົນແມ່ນແຕ່ໜ້ອຍ. ພຣະເຈົ້າໄດ້ປະຕິບັດພາລະກິດຫຼາຍຢ່າງ ແລະ ໄດ້ກ່າວພຣະທຳ ຫຼາຍຂໍ້ ແລະ ເຖິງວ່າຜູ້ຄົນຈະຮັບຮູ້ວ່າ ພວກມັນແມ່ນຄວາມຈິງ, ແຕ່ແນວຄິດກ່ຽວກັບພຣະເຈົ້າຍັງຈະ ປາກົດຂຶ້ນໃນພວກມັນ. ຖ້າຜູ້ຄົນປາດຖະໜາທີ່ຈະເຂົ້າໃຈຄວາມຈິງ ແລະ ຮັບເອົາມັນ, ພວກເຂົາຕ້ອງ ມີຄວາມໝັ້ນໃຈ ແລະ ຄວາມມຸ່ງໝັ້ນປາດຖະໜາເພື່ອສາມາດຍຶດໝັ້ນໃນສິ່ງທີ່ພວກເຂົາໄດ້ເຫັນ ແລະ ສິ່ງທີ່ພວກເຂົາໄດ້ຮັບຈາກປະສົບການຂອງພວກເຂົາ. ບໍ່ວ່າພຣະເຈົ້າກະທຳສິ່ງໃດໃນຄົນ, ພວກເຂົາ ຕ້ອງຮັກສາສິ່ງທີ່ຕົວພວກເຂົາເອງມີຢູ່ນັ້ນໄວ້, ມີຄວາມຈິງໃຈຕໍ່ໜ້າພຣະເຈົ້າ ແລະ ຈົງຮັກພັກດີຕໍ່ ພຣະອົງຈົນເຖິງທີ່ສຸດ. ນີ້ແມ່ນໜ້າທີ່ຂອງມະນຸດຊາດ. ຜູ້ຄົນຕ້ອງສະໜັບສະໜູນສິ່ງທີ່ພວກເຂົາຕ້ອງ ເຮັດ. ການເຊື່ອໃນພຣະເຈົ້າຈຳເປັນຕ້ອງມີ ການເຊື່ອຟັງຕໍ່ພຣະອົງ ແລະ ປະສົບກັບພາລະກິດຂອງ ພຣະອົງ. ພຣະເຈົ້າໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍ, ມັນສາມາດເວົ້າໄດ້ວ່າ ສຳລັບມະນຸດ ທັງໝົດ ແມ່ນຄວາມສົມບູນແບບ, ການເຮັດໃຫ້ບໍລິສຸດ ແລະ ຍິ່ງໄປກວ່ານັ້ນ, ມັນແມ່ນການຕີສອນ. ບໍ່ເຄີຍມີ ແມ່ນແຕ່ຂັ້ນຕອນດຽວແຫ່ງພາລະກິດຂອງພຣະເຈົ້າທີ່ສອດຄ່ອງກັບແນວຄິດຂອງມະນຸດ; ສິ່ງທີ່

ມະນຸດໄດ້ຊື່ນຊົມແມ່ນພຣະທຳທີ່ຮຸນແຮງຂອງພຣະເຈົ້າ. ເມື່ອພຣະເຈົ້າມາເຖິງ, ຄົນຄວນຊື່ນຊົມຄວາມສະຫງ່າງາມ ແລະ ຄວາມໂກດຮ້າຍຂອງພຣະອົງ. ເຖິງຢ່າງໃດກໍຕາມ, ບໍ່ວ່າພຣະທຳຂອງພຣະອົງນັ້ນຮຸນແຮງພຽງໃດ, ພຣະອົງກໍມາເພື່ອຊ່ວຍມວນມະນຸດໃຫ້ລອດ ແລະ ເຮັດໃຫ້ມະນຸດສົມບູນແບບ. ໃນຖານະເປັນສິ່ງຊົງສ້າງ, ຜູ້ຄົນຄວນປະຕິບັດໃຫ້ສຳເລັດໜ້າທີ່ທີ່ພວກເຂົາຄວນປະຕິບັດ ແລະ ຢືນເປັນພະຍານໃຫ້ແກ່ພຣະເຈົ້າຢູ່ທ່າມກາງການເຮັດໃຫ້ບໍລິສຸດ. ໃນທຸກໆການທົດລອງ ພວກເຂົາຄວນຮັກສາພະຍານທີ່ພວກເຂົາຄວນເປັນ ແລະ ເປັນພະຍານທີ່ດັງກ້ອງສະນັ່ນໃຫ້ແກ່ພຣະເຈົ້າ. ບຸກຄົນທີ່ເຮັດສິ່ງນີ້ ແມ່ນຜູ້ມີໄຊ. ບໍ່ວ່າພຣະເຈົ້າເຮັດໃຫ້ເຈົ້າບໍລິສຸດແນວໃດ, ເຈົ້າຍັງຄົງມີຄວາມໝັ້ນໃຈທີ່ເຕັມປ່ຽມ ແລະ ບໍ່ເຄີຍສູນເສຍຄວາມໝັ້ນໃຈໃນພຣະເຈົ້າ. ເຈົ້າປະຕິບັດສິ່ງທີ່ມະນຸດຄວນປະຕິບັດ. ນີ້ແມ່ນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ ແລະ ຫົວໃຈຂອງມະນຸດຄວນສາມາດກັບມາຫາພຣະອົງໄດ້ຢ່າງເຕັມທີ່ ແລະ ກັບມາຫາພຣະອົງໃນທຸກຊ່ວງເວລາ ນີ້ແມ່ນຜູ້ມີໄຊ. ບັນດາຜູ້ທີ່ພຣະເຈົ້າອ້າງອີງເຖິງວ່າເປັນ "ຜູ້ມີໄຊ" ແມ່ນບັນດາຜູ້ທີ່ຍັງສາມາດຢືນຢັດເປັນພະຍານ ແລະ ຮັກສາຄວາມໝັ້ນໃຈ ແລະ ຄວາມຈົງຮັກພັກດີຂອງພວກເຂົາຕໍ່ພຣະເຈົ້າເມື່ອຕົກຢູ່ພາຍໃຕ້ອິດທິພົນຂອງຊາຕານ ແລະ ຖືກຄອບງຳໂດຍຊາຕານ, ນັ້ນຄື ເມື່ອຕົກຢູ່ໃນອຳນາດຂອງຄວາມມືດ. ເມື່ອເຈົ້າຍັງສາມາດຮັກສາຫົວໃຈທີ່ບໍລິສຸດ ແລະ ຄວາມຮັກແທ້ທີ່ມີຕໍ່ພຣະເຈົ້າໄດ້ ບໍ່ວ່າຈະເກີດຫຍັງຂຶ້ນກໍຕາມ ເຈົ້າຢືນຢັດເປັນພະຍານຢູ່ຕໍ່ໜ້າພຣະເຈົ້າ ແລະ ນີ້ແມ່ນສິ່ງທີ່ພຣະເຈົ້າອ້າງອີງເຖິງວ່າ ເປັນ "ຜູ້ມີໄຊ". ຖ້າການສະແຫວງຫາຂອງເຈົ້ານັ້ນດີເລີດເມື່ອພຣະເຈົ້າອວຍພອນເຈົ້າ, ແຕ່ເຈົ້າທໍ້ຖອຍໂດຍບໍ່ໄດ້ຮັບພອນພຣະອົງ, ນີ້ແມ່ນຄວາມບໍລິສຸດບໍ? ໃນເມື່ອເຈົ້າແນ່ໃຈວ່າ ເສັ້ນທາງນີ້ເປັນຈິງ, ເຈົ້າຕ້ອງຕິດຕາມມັນຈົນເຖິງທີ່ສຸດ; ເຈົ້າຄວນຮັກສາໄວ້ເຊິ່ງຄວາມຈົງຮັກພັກດີຂອງເຈົ້າຕໍ່ພຣະເຈົ້າ. ໃນເມື່ອເຈົ້າໄດ້ເຫັນວ່າພຣະເຈົ້າເອງໄດ້ມາໃນໂລກເພື່ອເຮັດໃຫ້ເຈົ້າສົມບູນແບບ, ເຈົ້າຄວນມອບຫົວໃຈທັງໝົດໃຫ້ພຣະອົງ. ຖ້າເຈົ້າຍັງສາມາດຕິດຕາມພຣະອົງບໍ່ວ່າພຣະອົງຈະກະທຳສິ່ງໃດ, ເຖິງແມ່ນວ່າພຣະອົງກຳນົດຜົນໄດ້ຮັບທີ່ບໍ່ພໍໃຈສຳລັບເຈົ້າໃນຕອນສຸດທ້າຍ, ກໍນີ້ແມ່ນການຮັກສາຄວາມບໍລິສຸດຂອງເຈົ້າຢູ່ຕໍ່ໜ້າພຣະເຈົ້າ. ຖວາຍຮ່າງກາຍຝ່າຍວິນຍານອັນບໍລິສຸດ ແລະ ພົມມະຈັນອັນບໍລິສຸດໃຫ້ແກ່ພຣະເຈົ້າ ໝາຍເຖິງການຮັກສາຫົວໃຈແຫ່ງຄວາມຈິງໃຈຕໍ່ໜ້າພຣະເຈົ້າ. ສຳລັບມວນມະນຸດ, ຄວາມຈິງໃຈແມ່ນຄວາມບໍລິສຸດ ແລະ ການສາມາດມີຄວາມຈິງໃຈຕໍ່ພຣະເຈົ້ານັ້ນ ແມ່ນການຮັກສາຄວາມບໍລິສຸດ. ນີ້ແມ່ນສິ່ງທີ່ເຈົ້າຄວນນຳເອົາໄປປະຕິບັດ. ເມື່ອເຈົ້າຄວນອະທິຖານ ກໍຈົ່ງອະທິຖານ; ເມື່ອເຈົ້າຄວນຊຸມນຸມເພື່ອໂອ້ລົມກັນ ກໍຈົ່ງເຮັດເຊັ່ນນັ້ນ; ເມື່ອເຈົ້າຄວນຮ້ອງເພງສັນລະເສີນ ກໍຈົ່ງຮ້ອງເພງສັນລະເສີນ ແລະ ເມື່ອເຈົ້າຄວນປະຖິ້ມເນື້ອໜັງ ກໍຈົ່ງປະຖິ້ມເນື້ອໜັງ. ເມື່ອເຈົ້າປະຕິບັດໜ້າທີ່ຂອງເຈົ້າ ເຈົ້າຈະບໍ່ເບິ່ງຂ້າມມັນ; ເມື່ອເຈົ້າຜະເຊີນກັບການທົດລອງ ກໍຈົ່ງໝັ້ນຄົງ. ນີ້ແມ່ນຄວາມຈົງຮັກພັກດີຕໍ່ພຣະເຈົ້າ. ຖ້າເຈົ້າບໍ່ຮັກສາໃນສິ່ງທີ່ຄົນຄວນປະຕິບັດໄວ້, ຄວາມທຸກທໍລະມານ ແລະ ການແກ້ໄຂບັນຫາຕ່າງໆທັງໝົດໃນອະດີດຂອງເຈົ້າກໍບໍ່ມີປະໂຫຍດຫຍັງເລີຍ.

ສຳລັບທຸກໆບາດກ້າວແຫ່ງພາລະກິດຂອງພຣະເຈົ້າ, ມີວິທີທາງທີ່ຄົນຄວນໃຫ້ການຮ່ວມມື.

ພຣະເຈົ້າເຮັດໃຫ້ຄົນບໍລິສຸດເພື່ອວ່າພວກເຂົາຈະມີຄວາມໝັ້ນໃຈເມື່ອໄດ້ຮັບການເຮັດໃຫ້ບໍລິສຸດ. ພຣະເຈົ້າເຮັດໃຫ້ຄົນບໍລິສຸດເພື່ອວ່າ ພວກເຂົາຈະມີຄວາມໝັ້ນໃຈທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າ ແລະ ເຕັມໃຈຍອມຮັບການເຮັດໃຫ້ບໍລິສຸດຂອງພຣະອົງ ແລະ ຖືກຈັດການ ແລະ ລິຮານໂດຍພຣະເຈົ້າ. ພຣະວິນຍານຂອງພຣະເຈົ້າປະຕິບັດພາລະກິດຢູ່ພາຍໃນຄົນເພື່ອນຳເອົາຄວາມສະຫວ່າງ ແລະ ແສງເຍືອງທາງມາສູ່ພວກເຂົາ ແລະ ເພື່ອໃຫ້ພວກເຂົາຮ່ວມມືກັບພຣະອົງ ແລະ ປະຕິບັດຕາມ. ພຣະເຈົ້າບໍ່ກ່າວໃນລະຫວ່າງການເຮັດໃຫ້ບໍລິສຸດ, ພຣະອົງບໍ່ເປັ່ງສຽງຂອງພຣະອົງອອກມາ, ແຕ່ກໍຍັງມີພາລະກິດທີ່ຜູ້ຄົນຄວນປະຕິບັດ. ເຈົ້າຄວນຮັກສາສິ່ງທີ່ເຈົ້າມີຢູ່ແລ້ວ, ເຈົ້າຄວນຍັງສາມາດອະທິຖານຫາພຣະເຈົ້າ, ໃກ້ຊິດກັບພຣະເຈົ້າ ແລະ ຢືນເປັນພະຍານຢູ່ຕໍ່ໜ້າພຣະເຈົ້າໄດ້; ດ້ວຍວິທີນີ້ເຈົ້າຈຶ່ງຈະສາມາດເຮັດສຳເລັດໜ້າທີ່ຂອງເຈົ້າໄດ້. ພວກເຈົ້າທັງໝົດຄວນເຫັນຢ່າງຊັດເຈນຈາກພາລະກິດຂອງພຣະເຈົ້າວ່າ ການທົດລອງຂອງພຣະອົງກ່ຽວກັບຄວາມໝັ້ນໃຈ ແລະ ຄວາມຮັກຂອງຄົນຮຽກຮ້ອງໃຫ້ພວກເຂົາອະທິຖານຫາພຣະເຈົ້າຫຼາຍຂຶ້ນ ແລະ ໃຫ້ພວກເຂົາຊີມພຣະທຳຂອງພຣະເຈົ້າຕໍ່ໜ້າພຣະອົງຫຼາຍຂຶ້ນ. ຖ້າພຣະເຈົ້າໃຫ້ແສງສະຫວ່າງເຈົ້າ ແລະ ເຮັດໃຫ້ເຈົ້າເຂົ້າໃຈຄວາມປະສົງຂອງພຣະອົງ ແຕ່ເຈົ້າບໍ່ໄດ້ເອົາສິ່ງໃດໃນນີ້ໄປປະຕິບັດຕາມ, ເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ. ເມື່ອເຈົ້ານຳເອົາພຣະທຳຂອງພຣະເຈົ້າໄປປະຕິບັດ, ເຈົ້າຄວນສາມາດອະທິຖານຫາພຣະອົງໄດ້ ແລະ ເມື່ອເຈົ້າຊີມພຣະທຳຂອງພຣະອົງ ເຈົ້າຄວນເຂົ້າມາຢູ່ຕໍ່ໜ້າພຣະອົງສະເໝີ ແລະ ສະແຫວງຫາ ແລະ ເຕັມໄປດ້ວຍຄວາມໝັ້ນໃຈໃນພຣະອົງ ໂດຍບໍ່ຮູ້ສຶກທໍ້ແທ້ ຫຼື ເຢັນຊາ. ບັນດາຜູ້ທີ່ບໍ່ນຳເອົາພຣະທຳຂອງພຣະເຈົ້າໄປປະຕິບັດຕາມແມ່ນເຕັມໄປດ້ວຍກຳລັງໃນລະຫວ່າງການຊຸມນຸມ, ແຕ່ຕົກຢູ່ໃນຄວາມມືດເມື່ອພວກເຂົາກັບເມືອເຮືອນ. ມີບາງຄົນທີ່ບໍ່ຕ້ອງການແມ່ນແຕ່ຊຸມນຸມກັນ. ດັ່ງນັ້ນ, ເຈົ້າຕ້ອງເຫັນຢ່າງຊັດເຈນວ່າໜ້າທີ່ໃດທີ່ຄົນເຊັ່ນນີ້ຄວນປະຕິບັດ. ເຈົ້າອາດບໍ່ຮູ້ວ່າຄວາມປະສົງຂອງພຣະເຈົ້າແມ່ນຫຍັງກັນແທ້, ແຕ່ເຈົ້າສາມາດປະຕິບັດໜ້າທີ່ຂອງເຈົ້າໄດ້, ເຈົ້າສາມາດອະທິຖານເມື່ອເຈົ້າຄວນອະທິຖານ, ເຈົ້າສາມາດນຳເອົາຄວາມຈິງໄປປະຕິບັດເມື່ອເຈົ້າຄວນປະຕິບັດ ແລະ ເຈົ້າສາມາດປະຕິບັດສິ່ງທີ່ຜູ້ຄົນຄວນປະຕິບັດ. ເຈົ້າສາມາດຮັກສານິມິດເດີມຂອງເຈົ້າໄດ້. ດ້ວຍວິທີນີ້, ເຈົ້າຈະສາມາດຍອມຮັບບາດກ້າວຕໍ່ໄປແຫ່ງພາລະກິດຂອງພຣະເຈົ້າໄດ້ຫຼາຍຂຶ້ນ. ມັນເປັນບັນຫາ ຖ້າເຈົ້າບໍ່ສະແຫວງຫາເມື່ອພຣະເຈົ້າປະຕິບັດພາລະກິດໃນທາງທີ່ລີ້ລັບ. ເມື່ອພຣະອົງກ່າວ ແລະ ເທດສະໜາໃນລະຫວ່າງການຊຸມນຸມ, ເຈົ້າຟັງດ້ວຍຄວາມກະຕືລືລົ້ນ, ແຕ່ເມື່ອພຣະອົງບໍ່ກ່າວ ເຈົ້າກໍຂາດກຳລັງ ແລະ ທໍ້ຖອຍ. ຄົນປະເພດໃດປະພຶດເຊັ່ນນີ້? ນີ້ແມ່ນຜູ້ຄົນທີ່ເລື່ອນລອຍໄປຕາມກະແສ. ພວກເຂົາບໍ່ມີທ່າທາງ, ບໍ່ມີປະຈັກພະຍານ ແລະ ບໍ່ມີນິມິດ! ຄົນສ່ວນຫຼາຍຈະເປັນແບບນີ້. ຖ້າເຈົ້າຍັງສືບຕໍ່ໃນທາງນີ້, ມື້ໜຶ່ງເມື່ອເຈົ້າພົບກັບການທົດລອງອັນຍິ່ງໃຫຍ່, ເຈົ້າກໍຈະຖືກລົງໂທດ. ການມີທ່າທາງແມ່ນສຳຄັນຫຼາຍໃນຂະບວນການເຮັດໃຫ້ຄົນສົມບູນແບບຂອງພຣະເຈົ້າ. ຖ້າເຈົ້າບໍ່ສົງໄສແມ່ນແຕ່ບາດກ້າວດຽວໃນພາລະກິດຂອງພຣະເຈົ້າ, ຖ້າເຈົ້າປະຕິບັດໜ້າທີ່ຂອງມະນຸດໄດ້ສຳເລັດ, ຖ້າເຈົ້າຮັກສາສິ່ງທີ່ພຣະເຈົ້າມີ ແລ້ວນຳໄປປະຕິບັດດ້ວຍໃຈຈິງ, ນັ້ນໝາຍຄວາມວ່າ ເຈົ້າຈື່ຄຳແນະນຳຂອງພຣະເຈົ້າ ແລະ ບໍ່ວ່າພຣະອົງກະທຳສິ່ງໃດໃນຕອນນີ້

ພວກເຈົ້າບໍ່ໄດ້ລືມຄຳແນະນຳຂອງພຣະອົງ, ຖ້າເຈົ້າ ບໍ່ມີຄວາມສົງໄສໃນພາລະກິດຂອງພຣະອົງ, ຮັກສາທ່າທາງຂອງເຈົ້າ, ຮັກສາຄຳພະຍານຂອງເຈົ້າ ແລະ ໄດ້ຮັບໄຊຊະນະໃນທຸກບາດກ້າວ, ທ້າຍທີ່ສຸດ ເຈົ້າຈະຖືກເຮັດໃຫ້ສົມບູນແບບໂດຍພຣະເຈົ້າ ແລະ ກາຍເປັນຜູ້ມີໄຊ. ຖ້າພວກເຈົ້າສາມາດຕັ້ງໝັ້ນຜ່ານທຸກບາດກ້າວຂອງການທົດລອງຂອງພຣະເຈົ້າ ແລະ ຖ້າເຈົ້າຍັງສາມາດຍຶດໝັ້ນຈົນເຖິງທີ່ສຸດ, ເຈົ້າກໍແມ່ນຜູ້ມີໄຊ, ເຈົ້າແມ່ນຄົນທີ່ຖືກເຮັດໃຫ້ສົມບູນແບບໂດຍພຣະເຈົ້າ. ຖ້າເຈົ້າບໍ່ສາມາດຕັ້ງໝັ້ນຢູ່ໃນການທົດລອງປັດຈຸບັນຂອງເຈົ້າ, ໃນອະນາຄົດ ມັນຈະຍິ່ງຍາກຂຶ້ນກວ່າອີກ. ຖ້າເຈົ້າປະສົບກັບຄວາມທຸກທໍລະມານພຽງເລັກນ້ອຍ ແລະ ເຈົ້າບໍ່ສະແຫວງຫາຄວາມຈິງ, ທ້າຍທີ່ສຸດເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ. ເຈົ້າຈະມີແຕ່ມືເປົ່າ. ມີບາງຄົນທີ່ທໍ້ຖອຍກັບການສະແຫວງຫາຂອງພວກເຂົາເມື່ອພວກເຂົາເຫັນວ່າພຣະເຈົ້າບໍ່ໄດ້ກ່າວຫຍັງເລີຍ ແລະ ຫົວໃຈຂອງພວກເຂົາກໍກະແຈກກະຈາຍໄປ. ນີ້ບໍ່ແມ່ນຄົນໂງ່ບໍ? ຄົນປະເພດເຫຼົ່ານີ້ບໍ່ມີຄວາມເປັນຈິງ. ເມື່ອພຣະເຈົ້າກ່າວ, ພວກເຂົາກໍແລ່ນໄປແລ່ນມາ, ຫຍຸ້ງໆ ແລະ ກະຕືລືລົ້ນຢູ່ຂ້າງນອກສະເໝີ, ແຕ່ຕອນນີ້ເມື່ອພຣະອົງບໍ່ໄດ້ກ່າວ, ພວກເຂົາກໍບໍ່ສະແຫວງຫາອີກຕໍ່ໄປ. ຄົນແບບນີ້ບໍ່ມີອະນາຄົດ. ໃນລະຫວ່າງການເຮັດໃຫ້ບໍລິສຸດ, ເຈົ້າຕ້ອງເຂົ້າສູ່ຈາກມຸມມອງດ້ານບວກ ແລະ ຮຽນຮູ້ບົດຮຽນທີ່ເຈົ້າຄວນຮຽນຮູ້; ເມື່ອເຈົ້າອະທິຖານຫາພຣະເຈົ້າ ແລະ ອ່ານພຣະທຳຂອງພຣະອົງ, ເຈົ້າຄວນສົມທຽບສະຖານະປັດຈຸບັນຂອງເຈົ້າກັບມັນ, ຄົ້ນພົບຄວາມບົກຜ່ອງຂອງເຈົ້າ ແລະ ພົບວ່າເຈົ້າມີບົດຮຽນຢ່າງຫຼວງຫຼາຍທີ່ຕ້ອງຮຽນຮູ້. ຍິ່ງເຈົ້າສະແຫວງຫາເມື່ອໄດ້ຮັບການເຮັດໃຫ້ບໍລິສຸດດ້ວຍໃຈຈິງຫຼາຍເທົ່າໃດ, ເຈົ້າຍິ່ງຈະພົບວ່າຕົວເຈົ້າເອງບໍ່ພຽງພໍຫຼາຍຂຶ້ນເທົ່ານັ້ນ. ເມື່ອເຈົ້າກຳລັງປະສົບກັບການເຮັດໃຫ້ບໍລິສຸດ ຈະມີຫຼາຍບັນຫາທີ່ເຈົ້າຜະເຊີນ; ເຈົ້າບໍ່ສາມາດເຫັນພວກມັນໄດ້ຢ່າງຊັດເຈນ, ເຈົ້າຕໍ່ວ່າ, ເຈົ້າເປີດເຜີຍເນື້ອໜັງຂອງເຈົ້າເອງ, ມີພຽງຜ່ານທາງນີ້ເທົ່ານັ້ນເຈົ້າຈຶ່ງຄົ້ນພົບວ່າອຸປະນິໄສອັນເສື່ອມຊາມຂອງເຈົ້ານັ້ນຮ້າຍແຮງພຽງໃດ.

ຄົນຂາດຄວາມສາມາດ ແລະ ພວກເຂົາຢູ່ຫ່າງໄກຈາກມາດຕະຖານຂອງພຣະເຈົ້າ, ໃນອະນາຄົດພວກເຂົາອາດຕ້ອງການຄວາມໝັ້ນໃຈຫຼາຍຂຶ້ນເພື່ອຍ່າງຕາມທາງສາຍນີ້. ພາລະກິດໃນວັນສຸດທ້າຍຂອງພຣະເຈົ້າຮຽກຮ້ອງໃຫ້ມີຄວາມໝັ້ນໃຈອັນມະຫາສານ, ມັນຮຽກຮ້ອງໃຫ້ມີຄວາມໝັ້ນໃຈທີ່ຍິ່ງໃຫຍ່ກວ່າຂອງໂຢບອີກ. ປາສະຈາກຄວາມໝັ້ນໃຈແລ້ວ, ຄົນຈະບໍ່ສາມາດສືບຕໍ່ໄດ້ຮັບປະສົບການ ແລະ ຈະບໍ່ສາມາດຖືກພຣະເຈົ້າເຮັດໃຫ້ສົມບູນແບບໄດ້. ເມື່ອວັນແຫ່ງການທົດລອງອັນຍິ່ງໃຫຍ່ມາເຖິງ, ຈະມີບາງຄົນຈະອອກຈາກຄຣິສຕະຈັກນີ້ ແລະ ບາງຄົນຈະອອກຈາກຄຣິສຕະຈັກນັ້ນ. ຈະມີບາງຄົນທີ່ເຮັດໄດ້ຂ້ອນຂ້າງດີໃນການສະແຫວງຫາຂອງພວກເຂົາໃນວັນທີ່ຜ່ານມາ ແລະ ບໍ່ຊັດເຈນວ່າເປັນຫຍັງພວກເຂົາຈຶ່ງບໍ່ເຊື່ອອີກຕໍ່ໄປ. ມີຫຼາຍໆສິ່ງທີ່ຈະເກີດຂຶ້ນ ແລະ ເຈົ້າຈະບໍ່ເຂົ້າໃຈ ແລະ ພຣະເຈົ້າຈະບໍ່ເປີດເຜີຍໝາຍສຳຄັນ ຫຼື ສິ່ງມະຫັດສະຈັນໃດໆ ຫຼື ບໍ່ກະທຳສິ່ງທີ່ເໜືອທຳມະຊາດໃດໆ. ນີ້ແມ່ນເພື່ອໃຫ້ເຫັນວ່າ ເຈົ້າສາມາດຕັ້ງໝັ້ນໄດ້, ພຣະເຈົ້າໃຊ້ຂໍ້ເທັດຈິງເພື່ອເຮັດໃຫ້ຄົນບໍລິສຸດ. ເຈົ້າຍັງບໍ່ທັນໄດ້ທົນທຸກທໍລະມານຫຼາຍເທື່ອ. ໃນອະນາຄົດ ເມື່ອການທົດລອງອັນຍິ່ງໃຫຍ່ມາເຖິງ, ໃນບາງບ່ອນ ທຸກຄົນໃນຄຣິສຕະຈັກຈະໜີອອກໄປ, ບັນດາຜູ້ທີ່ເຈົ້າເຄີຍຮູ້ຈັກດີກໍຈະໜີໄປ ແລະ ປະຖິ້ມ

ຄວາມເຊື່ອຂອງພວກເຂົາ. ແລ້ວເຈົ້າຍັງຈະສາມາດຕັ້ງໝັ້ນໄດ້ຢູ່ບໍ? ປັດຈຸບັນນີ້, ການທົດລອງຕ່າງໆທີ່ເຈົ້າໄດ້ຜະເຊີນແມ່ນການທົດລອງເລັກນ້ອຍ ແລະ ເຈົ້າເກືອບຈະບໍ່ສາມາດຕ້ານທານພວກມັນໄດ້. ບາດກ້າວນີ້ລວມມີການເຮັດໃຫ້ບໍລິສຸດ ແລະ ການເຮັດໃຫ້ສົມບູນແບບຜ່ານທາງພຣະທຳເທົ່ານັ້ນ. ໃນບາດກ້າວຕໍ່ໄປ, ຂໍ້ເທັດຈິງຈະມາຢູ່ຕໍ່ໜ້າເຈົ້າເພື່ອເຮັດໃຫ້ເຈົ້າບໍລິສຸດ ແລະ ຈາກນັ້ນ ເຈົ້າກໍຈະຢູ່ທ່າມກາງອັນຕະລາຍ. ເມື່ອມັນເຖິງຍາມເອົາຈິງເອົາຈັງແທ້ໆ, ພຣະເຈົ້າຈະແນະນຳພວກເຈົ້າໃຫ້ຟ້າວໜີອອກໄປ ແລະ ຄົນໃນສາສະໜາຈະພະຍາຍາມຜູກມັດພວກເຈົ້າໄວ້. ນີ້ແມ່ນເພື່ອໃຫ້ເຫັນວ່າເຈົ້າສາມາດສືບຕໍ່ໃນເສັ້ນທາງນີ້. ນີ້ແມ່ນການທົດລອງທັງໝົດ. ການທົດລອງໃນປັດຈຸບັນແມ່ນການທົດລອງເລັກນ້ອຍ, ແຕ່ຈະມີວັນນັ້ນມາເຖິງເມື່ອພໍ່ແມ່ໃນເຮືອນຈະບໍ່ເຊື່ອອີກຕໍ່ໄປ ແລະ ລູກໆໃນເຮືອນຈະບໍ່ເຊື່ອອີກຕໍ່ໄປ. ເຈົ້າຍັງຈະສາມາດສືບຕໍ່ໄດ້ບໍ? ຍິ່ງເຈົ້າກ້າວໄປຂ້າງໜ້າຫຼາຍເທົ່າໃດ, ການທົດລອງຂອງເຈົ້າກໍຍິ່ງໃຫຍ່ຂຶ້ນເທົ່ານັ້ນ. ພຣະເຈົ້າດຳເນີນພາລະກິດແຫ່ງການເຮັດໃຫ້ຄົນບໍລິສຸດຂອງພຣະອົງ ອີງຕາມຄວາມຕ້ອງການ ແລະ ວຸດທິພາວະຂອງພວກເຂົາ. ໃນຊ່ວງເວລາທີ່ພຣະເຈົ້າເຮັດໃຫ້ມະນຸດຊາດສົມບູນແບບນັ້ນ, ມັນເປັນໄປບໍ່ໄດ້ທີ່ຈຳນວນຄົນຈະເພີ່ມຂຶ້ນເລື້ອຍໆ, ມີແຕ່ມັນຈະຫຼຸດລົງເທົ່ານັ້ນ. ມີພຽງຜ່ານການເຮັດໃຫ້ບໍລິສຸດເທົ່ານັ້ນທີ່ຄົນສາມາດຖືກເຮັດໃຫ້ສົມບູນແບບໄດ້. ຖືກຈັດການ, ຖືກລົງວິໄນ, ຖືກທົດສອບ, ຖືກຕີສອນ ແລະ ຖືກສາບແຊ່ງ ເຈົ້າຈະສາມາດຕ້ານທານທັງໝົດນີ້ໄດ້ບໍ? ເມື່ອເຈົ້າເຫັນຄຣິສຕະຈັກທີ່ມີສະຖານະພາບທີ່ດີເປັນພິເສດ, ບ່ອນທີ່ອ້າຍເອື້ອຍນ້ອງທັງໝົດກຳລັງສະແຫວງຫາດ້ວຍພະລັງແຮງກ້າອັນໃຫຍ່ຫຼວງ, ເຈົ້າເອງກໍຈະຮູ້ສຶກມີກຳລັງໃຈ. ເມື່ອວັນທີ່ພວກເຂົາທັງໝົດໄດ້ໜີອອກໄປມາເຖິງ, ບາງຄົນໃນພວກເຂົາບໍ່ເຊື່ອອີກຕໍ່ໄປ, ບາງຄົນອອກໄປເພື່ອເຮັດທຸລະກິດ ຫຼື ແຕ່ງງານ ແລະ ບາງຄົນເຂົ້າສາດສະໜາ, ແລ້ວເຈົ້າຍັງຈະສາມາດຕັ້ງໝັ້ນໄດ້ຢູ່ບໍ? ເຈົ້າຍັງຈະສາມາດຄົງຢູ່ໂດຍທີ່ບໍ່ໄດ້ຮັບຜົນກະທົບພາຍໃນໄດ້ຢູ່ບໍ? ການເຮັດໃຫ້ມະນຸດຊາດສົມບູນແບບຂອງພຣະເຈົ້າບໍ່ແມ່ນສິ່ງທີ່ງ່າຍປານນັ້ນ! ພຣະອົງຊົງໃຊ້ຫຼາຍສິ່ງເພື່ອເຮັດໃຫ້ຄົນບໍລິສຸດ. ຄົນເຫັນວ່າສິ່ງເຫຼົ່ານີ້ເປັນວິທີການ, ແຕ່ໃນຄວາມຕັ້ງໃຈດັ້ງເດີມຂອງພຣະເຈົ້າແລ້ວ ສິ່ງເຫຼົ່ານີ້ບໍ່ແມ່ນວິທີການແມ່ນແຕ່ໜ້ອຍດຽວເລີຍ, ແຕ່ມັນແມ່ນຂໍ້ເທັດຈິງ. ທ້າຍທີ່ສຸດ, ເມື່ອພຣະອົງໄດ້ເຮັດໃຫ້ຄົນບໍລິສຸດໃນຂັ້ນໃດໜຶ່ງ ແລະ ພວກເຂົາບໍ່ມີການຈົ່ມວ່າອີກຕໍ່ໄປ, ຂັ້ນຕອນນີ້ແຫ່ງພາລະກິດຂອງພຣະອົງກໍຈະສຳເລັດລົງ. ພາລະກິດອັນຍິ່ງໃຫຍ່ຂອງພຣະວິນຍານບໍລິສຸດແມ່ນການເຮັດໃຫ້ເຈົ້າສົມບູນແບບ ແລະ ເມື່ອພຣະອົງບໍ່ໄດ້ປະຕິບັດພາລະກິດ ແລະ ລີ້ລັບຢູ່, ນັ້ນແມ່ນຍິ່ງເພື່ອວັດຖຸປະສົງແຫ່ງການເຮັດໃຫ້ເຈົ້າສົມບູນແບບ. ດ້ວຍວິທີນີ້ຈະສາມາດເຮັດໃຫ້ເຫັນຢ່າງຊັດເຈນວ່າ ຜູ້ຄົນມີຄວາມຮັກຕໍ່ພຣະເຈົ້າ ຫຼື ບໍ່ ແລະ ເບິ່ງວ່າເຂົາມີຄວາມໝັ້ນໃຈຢ່າງແທ້ຈິງໃນພຣະອົງ ຫຼື ບໍ່. ເມື່ອພຣະເຈົ້າກ່າວຢ່າງຊັດເຈນ, ເຈົ້າບໍ່ຈຳເປັນຕ້ອງຄົ້ນຫາ; ເມື່ອພຣະອົງປົກປິດເທົ່ານັ້ນທີ່ເຈົ້າຕ້ອງຄົ້ນຫາ ແລະ ສຳຜັດເຖິງເສັ້ນທາງຂອງເຈົ້າດ້ວຍຕົນເອງ. ເຈົ້າຄວນທີ່ຈະສາມາດປະຕິບັດໜ້າທີ່ຂອງສິ່ງຖືກສ້າງໃຫ້ສຳເລັດ ແລະ ບໍ່ວ່າຜົນໄດ້ຮັບໃນອະນາຄົດຂອງເຈົ້າ ແລະ ຈຸດໝາຍປາຍທາງຂອງເຈົ້າຈະເປັນແນວໃດ, ເຈົ້າກໍຄວນທີ່ຈະສາມາດສະແຫວງຫາຄວາມຮູ້ ແລະ ຄວາມຮັກສຳລັບພຣະເຈົ້າ ໃນລະຫວ່າງຫຼາຍປີທີ່ເຈົ້າມີຊີວິດຢູ່ ແລະ ບໍ່ວ່າ

ພຣະເຈົ້າປະຕິບັດຕໍ່ເຈົ້າແນວໃດ, ເຈົ້າຄວນທີ່ຈະຫຼີກຫຼ່ຽງການຈົ່ມວ່າໄດ້. ມີເງື່ອນໄຂດຽວສຳລັບພາລະກິດຂອງພຣະວິນຍານບໍລິສຸດຢູ່ພາຍໃນຜູ້ຄົນ. ພວກເຂົາຄວນກະຫາຍ ແລະ ສະແຫວງຫາ ແລະ ບໍ່ສອງຈິດສອງໃຈ ຫຼື ສົງໄສກ່ຽວກັບການກະທຳຂອງພຣະເຈົ້າ ແລະ ພວກເຂົາສາມາດປະຕິບັດໜ້າທີ່ໄດ້ຕະຫຼອດເວລາ, ດ້ວຍວິທີນີ້ເທົ່ານັ້ນທີ່ພວກເຂົາຈະສາມາດໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດໄດ້. ໃນແຕ່ລະບາດກ້າວແຫ່ງພາລະກິດຂອງພຣະເຈົ້າ, ສິ່ງທີ່ຮຽກຮ້ອງຈາກມະນຸດແມ່ນຄວາມໝັ້ນໃຈອັນມະຫາສານ ແລະ ເຂົ້າມາຢູ່ຕໍ່ໜ້າພຣະເຈົ້າເພື່ອການສະແຫວງຫາ, ມີພຽງຜ່ານປະສົບການເທົ່ານັ້ນຜູ້ຄົນຈຶ່ງຈະສາມາດຄົ້ນພົບວ່າ ພຣະເຈົ້ານັ້ນໜ້າຮັກພຽງໃດ ແລະ ພຣະວິນຍານບໍລິສຸດປະຕິບັດພາລະກິດໃນຜູ້ຄົນແນວໃດ. ຖ້າເຈົ້າບໍ່ມີປະສົບການ, ຖ້າເຈົ້າບໍ່ສຳຜັດເຖິງເສັ້ນທາງຂອງເຈົ້າດ້ວຍຕົນເອງ, ຖ້າເຈົ້າບໍ່ສະແຫວງຫາ, ເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ. ເຈົ້າຕ້ອງສຳຜັດເຖິງເສັ້ນທາງຂອງເຈົ້າຜ່ານທາງປະສົບການຂອງເຈົ້າເອງ ແລະ ມີພຽງຜ່ານປະສົບການຂອງເຈົ້າເທົ່ານັ້ນ, ເຈົ້າຈຶ່ງຈະສາມາດເບິ່ງເຫັນການກະທຳຂອງພຣະເຈົ້າໄດ້ ແລະ ຮັບຮູ້ເຖິງຄວາມມະຫັດສະຈັນ ແລະ ຄວາມບໍ່ສາມາດຢັ່ງເຖິງຂອງພຣະອົງ.

# ເຈົ້າຄືບຸກຄົນທີ່ໄດ້ກັບມາມີຊີວິດແລ້ວບໍ?

ມີແຕ່ເມື່ອເຈົ້າໄດ້ໂຍນຖິ້ມອຸປະນິໄສທີ່ເສື່ອມຊາມ ແລະ ບັນລຸການດຳລົງຊີວິດຕາມຄວາມເປັນມະນຸດທີ່ປົກກະຕິແລ້ວ ເຈົ້າຈຶ່ງຈະຖືກເຮັດສົມບູນ. ເຖິງແມ່ນວ່າ ເຈົ້າຈະບໍ່ສາມາດບອກການທຳນາຍ ຫຼື ຄວາມລຶກລັບໃດໆໄດ້, ເຈົ້າກໍຈະດຳເນີນຊີວິດ ແລະ ເປີດເຜີຍລັກສະນະຂອງມະນຸດ. ພຣະເຈົ້າໄດ້ສ້າງມະນຸດ ແຕ່ຫຼັງຈາກນັ້ນ ມະນຸດກໍຖືກຊາຕານເຮັດໃຫ້ເສື່ອມຊາມ ຈົນຜູ້ຄົນໄດ້ກາຍເປັນ “ຄົນຕາຍ”. ດ້ວຍເຫດນີ້ ຫຼັງຈາກທີ່ເຈົ້າໄດ້ປ່ຽນແປງ ເຈົ້າຈະບໍ່ເປັນຄືກັບ “ຄົນຕາຍ” ເຫຼົ່ານີ້ອີກຕໍ່ໄປ. ມັນແມ່ນພຣະທຳຂອງພຣະເຈົ້າທີ່ເຮັດໃຫ້ວິນຍານຂອງຜູ້ຄົນລຸກສະຫວ່າງ ແລະ ເຮັດໃຫ້ພວກເຂົາໄດ້ເກີດໃໝ່ ແລະ ເມື່ອວິນຍານຂອງຜູ້ຄົນໄດ້ເກີດໃໝ່, ແລ້ວພວກເຂົາກໍຈະມີຊີວິດ. ເມື່ອເຮົາເວົ້າເຖິງ “ຄົນຕາຍ”, ເຮົາໝາຍເຖິງຊາກສົບທີ່ບໍ່ມີວິນຍານ, ຜູ້ຄົນທີ່ວິນຍານຂອງພວກເຂົາໄດ້ຕາຍຢູ່ພາຍໃນພວກເຂົາ. ເມື່ອປະກາຍໄຟຊີວິດຖືກຈູດຂຶ້ນໃນວິນຍານຂອງຜູ້ຄົນ, ແລ້ວຜູ້ຄົນກໍມີຊີວິດໃໝ່. ນັກບຸນທີ່ກ່າວເຖິງໃນເມື່ອກ່ອນ ໝາຍເຖິງຜູ້ຄົນທີ່ໄດ້ມີຊີວິດ, ຜູ້ທີ່ຢູ່ພາຍໃຕ້ອິດທິພົນຂອງຊາຕານ ແຕ່ເອົາຊະນະຊາຕານໄດ້. ປະຊາຊົນທີ່ຖືກເລືອກໃນປະເທດຈີນໄດ້ອົດທົນກັບການຂົ່ມເຫັງທີ່ໂຫດຮ້າຍ ແລະ ໄຮ້ມະນຸດສະທຳ ແລະ ການຫຼອກລວງຂອງມັງກອນແດງທີ່ຍິ່ງໃຫຍ່, ເຊິ່ງໄດ້ປ່ອຍໃຫ້ພວກເຂົາຖືກທຳລາຍດ້ານຈິດໃຈ ແລະ ບໍ່ມີຄວາມກ້າແມ່ນແຕ່ໜ້ອຍດຽວທີ່ຈະມີຊີວິດຢູ່. ສະນັ້ນ, ການປຸກວິນຍານຂອງພວກເຂົາຕ້ອງເລີ່ມດ້ວຍແກ່ນແທ້ຂອງພວກເຂົາ: ໃນແກ່ນແທ້ຂອງພວກເຂົາ, ວິນຍານຂອງພວກເຂົາຕ້ອງຖືກປຸກຂຶ້ນມາ ເທື່ອລະໜ້ອຍ. ເມື່ອມື້ໜຶ່ງ ພວກເຂົາມີຊີວິດແລ້ວ, ກໍຈະບໍ່ມີສິ່ງກີດຂວາງອີກຕໍ່ໄປ ແລະ ທຸກຢ່າງຈະດຳເນີນໄປຢ່າງລຽບງ່າຍ. ໃນເວລານີ້, ສິ່ງນີ້ກໍຍັງຄົງບໍ່ສາມາດບັນລຸໄດ້. ຄົນສ່ວນໃຫຍ່ດຳລົງຊີວິດໃນລັກສະນະທີ່ກໍ່ໃຫ້ເກີດກະແສນໍ້າທີ່ອັນຕະລາຍເຖິງຕາຍຫຼາຍຢ່າງ; ພວກເຂົາຖືກອ້ອມຮອບດ້ວຍບັນຍາກາດແຫ່ງຄວາມຕາຍ ແລະ ມີຫຼາຍຢ່າງທີ່ພວກເຂົາຂາດແຄນ. ຄຳເວົ້າຂອງບາງຄົນແບກຄວາມຕາຍ, ການກະທຳຂອງພວກເຂົາແບກຄວາມຕາຍ ແລະ ເກືອບໝົດທຸກສິ່ງທີ່ພວກເຂົານຳອອກມາໃນລັກສະນະທີ່ພວກເຂົາດຳລົງຊີວິດແມ່ນປະກອບມີຄວາມຕາຍ. ໃນມື້ນີ້, ຖ້າຜູ້ຄົນເປັນພະຍານໃຫ້ແກ່ພຣະເຈົ້າຢ່າງເປີດເຜີຍ, ແລ້ວພວກເຂົາກໍຈະລົ້ມເຫຼວໃນໜ້າທີ່ນີ້, ຍ້ອນພວກເຂົາຍັງບໍ່ທັນມີຊີວິດຢ່າງສົມບູນເທື່ອ ແລະ ມີຄົນຕາຍຫຼາຍເກີນໄປໃນທ່າມກາງພວກເຈົ້າ. ໃນມື້ນີ້, ບາງຄົນຖາມວ່າເປັນຫຍັງພຣະເຈົ້າຈຶ່ງບໍ່ສະແດງສັນຍານ ແລະ ສິ່ງອັດສະຈັນບາງຢ່າງ ເພື່ອວ່າພຣະອົງຈະສາມາດເຜີຍແຜ່ພາລະກິດຂອງພຣະອົງຢ່າງວ່ອງໄວໃນບັນດາຊົນຕ່າງຊາດ. ຄົນຕາຍບໍ່ສາມາດເປັນພະຍານໃຫ້ແກ່ພຣະເຈົ້າໄດ້; ນັ້ນຄືສິ່ງທີ່ມີພຽງຄົນມີຊີວິດເທົ່ານັ້ນສາມາດເຮັດໄດ້ ແລະ ເຖິງຢ່າງໃດກໍຕາມຄົນສ່ວນໃຫຍ່ໃນທຸກມື້ນີ້ກໍເປັນ “ຄົນຕາຍ”; ມີຫຼາຍຄົນເກີນໄປທີ່ດຳລົງຊີວິດຢູ່ພາຍໃຕ້ການປົກຄຸມແຫ່ງຄວາມຕາຍ, ພາຍໃຕ້ອິດທິພົນຂອງຊາຕານ ແລະ ບໍ່ສາມາດໄດ້ຮັບໄຊຊະນະໄດ້. ເມື່ອເປັນແບບນີ້, ພວກເຂົາຈະສາມາດເປັນພະຍານໃຫ້ແກ່ພຣະເຈົ້າໄດ້ແນວໃດ? ພວກເຂົາຈະສາມາດເຜີຍແຜ່ພາລະກິດແຫ່ງພຣະກິດຕິຄຸນໄດ້ແນວໃດ?

ທຸກຄົນທີ່ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມມືດ ແມ່ນຄົນທີ່ດຳລົງຊີວິດທ່າມກາງຄວາມຕາຍ, ຄົນທີ່ຖືກຊາຕານຄອບງຳ. ຖ້າບໍ່ໄດ້ຮັບການຊ່ວຍໃຫ້ລອດພົ້ນໂດຍພຣະເຈົ້າ ແລະ ຖືກພິພາກສາ ແລະ ຖືກຂ້ຽນຕີໂດຍພຣະເຈົ້າ, ຜູ້ຄົນກໍຈະບໍ່ສາມາດໜີຈາກອິດທິພົນຂອງຄວາມຕາຍໄດ້; ພວກເຂົາບໍ່ສາມາດກາຍເປັນຄົນທີ່ມີຊີວິດໄດ້. "ຄົນຕາຍ" ເຫຼົ່ານີ້ບໍ່ສາມາດເປັນພະຍານໃຫ້ແກ່ພຣະເຈົ້າໄດ້ ແລະ ພຣະເຈົ້າບໍ່ສາມາດໃຊ້ພວກເຂົາໄດ້, ແຮງໄກທີ່ຈະເຂົ້າສູ່ອານາຈັກ. ພຣະເຈົ້າຕ້ອງການຄຳພະຍານຂອງຄົນທີ່ມີຊີວິດ, ບໍ່ແມ່ນຄົນຕາຍ ແລະ ພຣະອົງຂໍໃຫ້ຄົນທີ່ມີຊີວິດ, ບໍ່ແມ່ນຄົນຕາຍ ປະຕິບັດພາລະກິດສຳລັບພຣະອົງ. "ຄົນຕາຍ" ແມ່ນຄົນທີ່ຕໍ່ຕ້ານ ແລະ ກະບົດຕໍ່ພຣະເຈົ້າ; ພວກເຂົາແມ່ນຜູ້ທີ່ບໍ່ເສີຍຊາໃນວິນຍານ ແລະ ບໍ່ເຂົ້າໃຈພຣະທຳຂອງພຣະເຈົ້າ; ພວກເຂົາແມ່ນຜູ້ທີ່ ບໍ່ໄດ້ນຳເອົາຄວາມຈິງໄປປະຕິບັດ ແລະ ບໍ່ມີຄວາມຈົງຮັກພັກດີແມ່ນແຕ່ໜ້ອຍດຽວຕໍ່ພຣະເຈົ້າ ແລະ ພວກເຂົາແມ່ນຄົນທີ່ດຳລົງຊີວິດພາຍໃຕ້ອິດທິພົນຂອງຊາຕານ ແລະ ຖືກຂູດຮີດໂດຍຊາຕານ. ຄົນຕາຍສະແດງຕົນເອງໂດຍການຢືນຢູ່ກົງກັນຂ້າມກັບຄວາມຈິງ, ໂດຍການກະບົດຕໍ່ພຣະເຈົ້າ ແລະ ໂດຍການເປັນຜູ້ຕໍ່າຕ້ອຍ, ໜ້າລັງກຽດ, ຊົ່ວຮ້າຍ, ໂຫດຮ້າຍ, ບໍ່ຈິງໃຈ ແລະ ຫຼອກລວງ. ເຖິງແມ່ນວ່າຜູ້ຄົນດັ່ງກ່າວຈະກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ພວກເຂົາກໍບໍ່ສາມາດດຳລົງຊີວິດຕາມພຣະທຳຂອງພຣະເຈົ້າໄດ້; ເຖິງແມ່ນພວກເຂົາມີຊີວິດ, ພວກເຂົາກໍພຽງແຕ່ເປັນຊາກສົບທີ່ຍ່າງ, ຫາຍໃຈ. ຄົນຕາຍບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້ຢ່າງສິ້ນເຊີງ, ແຮງໄກທີ່ຈະໃຫ້ເຊື່ອຟັງພຣະອົງທັງໝົດ. ພວກເຂົາພຽງແຕ່ຫຼອກລວງພຣະອົງ, ໝິ່ນປະໝາດພຣະອົງ ແລະ ທໍລະຍົດພຣະອົງເທົ່ານັ້ນ ແລະ ທຸກສິ່ງທີ່ພວກເຂົາສະແດງອອກຈາກລັກສະນະທີ່ພວກເຂົາດຳລົງຊີວິດກໍເປີດເຜີຍເຖິງທຳມະຊາດຂອງຊາຕານ. ຖ້າຜູ້ຄົນປາຖະໜາທີ່ຈະເປັນສິ່ງທີ່ມີຊີວິດ ແລະ ເປັນພະຍານໃຫ້ແກ່ພຣະເຈົ້າ ແລະ ໄດ້ຮັບການເຫັນດີເຫັນພ້ອມຈາກພຣະເຈົ້າ, ແລ້ວພວກເຂົາກໍ່ຕ້ອງຍອມຮັບຄວາມລອດພົ້ນຂອງພຣະເຈົ້າ; ພວກເຂົາຕ້ອງເຕັມໃຈຍອມຕໍ່ການພິພາກສາ ແລະ ການຂ້ຽນຕີຂອງພຣະອົງ ແລະ ຕ້ອງເຕັມໃຈຮັບເອົາການລິຮານຂອງພຣະເຈົ້າ ແລະ ຖືກຈັດການໂດຍພຣະອົງ. ມີແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະສາມາດປະຕິບັດຄວາມຈິງທັງໝົດທີ່ພຣະເຈົ້າຮຽກຮ້ອງໄວ້ ແລະ ມີແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະໄດ້ຮັບຄວາມລອດພົ້ນຂອງພຣະເຈົ້າ ແລະ ກາຍເປັນຜູ້ທີ່ມີຊີວິດຢ່າງແທ້ຈິງ. ຄົນທີ່ມີຊີວິດແມ່ນຖືກຊ່ວຍໃຫ້ລອດພົ້ນໂດຍຣະເຈົ້າ; ພວກເຂົາໄດ້ຖືກພິພາກສາ ແລະ ຂ້ຽນຕີໂດຍພຣະເຈົ້າ, ພວກເຂົາເຕັມໃຈອຸທິດຕົນເອງ ແລະ ມີຄວາມສຸກທີ່ຈະວາງຊີວິດຂອງພວກເຂົາລົງໃຫ້ແກ່ພຣະເຈົ້າ ແລະ ພວກເຂົາຈະເຕັມໃຈທີ່ຈະອຸທິດຊີວິດທັງໝົດຂອງພວກເຂົາໃຫ້ແກ່ພຣະເຈົ້າ. ມີແຕ່ເມື່ອຄົນທີ່ມີຊີວິດເປັນພະຍານໃຫ້ແກ່ພຣະເຈົ້າເທົ່ານັ້ນ, ຊາຕານຈຶ່ງຈະຖືກເຮັດໃຫ້ອັບອາຍ; ມີແຕ່ຄົນທີ່ມີຊີວິດເທົ່ານັ້ນ ທີ່ສາມາດເຜີຍແຜ່ພາລະກິດແຫ່ງພຣະກິດຕິຄຸນຂອງພຣະເຈົ້າໄດ້, ມີແຕ່ຄົນທີ່ມີຊີວິດເທົ່ານັ້ນທີ່ພໍໃຈພຣະເຈົ້າ ແລະ ມີແຕ່ຄົນທີ່ມີຊີວິດເທົ່ານັ້ນທີ່ເປັນຄົນແທ້ຈິງ. ໃນເບື້ອງຕົ້ນ ມະນຸດທີ່ພຣະເຈົ້າສ້າງຂຶ້ນແມ່ນມີຊີວິດ, ແຕ່ຍ້ອນຄວາມເສື່ອມຊາມຂອງຊາຕານ ມະນຸດຈຶ່ງດຳລົງຊີວິດທ່າມກາງຄວາມຕາຍ ແລະ ດຳລົງຊີວິດພາຍໃຕ້ອິດທິພົນຂອງຊາຕານ ແລະ ໃນລັກສະນະນີ້ ຜູ້ຄົນຈຶ່ງໄດ້ກາຍເປັນຄົນຕາຍທີ່ບໍ່ມີວິນຍານ, ພວກເຂົາໄດ້ກາຍເປັນສັດຕູຜູ້ທີ່

ຕໍ່ຕ້ານພຣະເຈົ້າ, ພວກເຂົາໄດ້ກາຍເປັນເຄື່ອງມືຂອງຊາຕານ ແລະ ພວກເຂົາໄດ້ກາຍເປັນຊະເລີຍຂອງຊາຕານ. ຄົນທີ່ມີຊີວິດທຸກຄົນທີ່ພຣະເຈົ້າສ້າງຂຶ້ນໄດ້ກາຍເປັນຄົນຕາຍ ແລະ ດ້ວຍເຫດນີ້ ພຣະເຈົ້າຈຶ່ງໄດ້ສູນເສຍຄຳພະຍານຂອງພຣະອົງ ແລະ ພຣະອົງກໍໄດ້ສູນເສຍມະນຸດຊາດ ທີ່ພຣະອົງສ້າງຂຶ້ນມາ ແລະ ເຊິ່ງເປັນສິ່ງໜຶ່ງດຽວທີ່ມີລົມຫາຍໃຈຂອງພຣະອົງ. ຖ້າພຣະເຈົ້າຈະເອົາຄຳພະຍານຂອງພຣະອົງກັບຄືນມາ ແລະ ເອົາຄົນເຫຼົ່ານັ້ນທີ່ຖືກສ້າງດ້ວຍມືຂອງພຣະອົງ ແຕ່ຖືກຈັບເປັນຊະເລີຍໂດຍຊາຕານນັ້ນຄືນມາ, ແລ້ວພຣະອົງກໍຈະຕ້ອງເຮັດໃຫ້ພວກເຂົາຟື້ນຄືນຊີບ ເພື່ອໃຫ້ພວກເຂົາກາຍເປັນຄົນທີ່ມີຊີວິດ ແລະ ພຣະອົງຕ້ອງເອົາພວກເຂົາກັບຄືນມາ ເພື່ອໃຫ້ພວກເຂົາດຳລົງຊີວິດໃນແສງສະຫວ່າງຂອງພຣະອົງ. ຄົນຕາຍແມ່ນຄົນທີ່ບໍ່ມີວິນຍານ, ຄົນທີ່ເສີຍຊາທີ່ສຸດ ແລະ ຄົນທີ່ຕໍ່ຕ້ານພຣະເຈົ້າ. ຍິ່ງໄປກວ່ານັ້ນ, ພວກເຂົາແມ່ນຄົນທີ່ບໍ່ຮູ້ຈັກພຣະເຈົ້າ. ຜູ້ຄົນເຫຼົ່ານີ້ບໍ່ມີເຈດຕະນາທີ່ຈະເຊື່ອຟັງພຣະເຈົ້າແມ່ນແຕ່ໜ້ອຍດຽວ; ພວກເຂົາພຽງແຕ່ກະບົດຕໍ່ພຣະອົງ ແລະ ຕໍ່ຕ້ານພຣະອົງ ແລະ ບໍ່ມີຄວາມຈົງຮັກພັກດີແມ່ນແຕ່ໜ້ອຍດຽວ. ຄົນທີ່ມີຊີວິດແມ່ນຄົນທີ່ວິນຍານຂອງພວກເຂົາໄດ້ເກີດໃໝ່, ຄົນທີ່ຮູ້ຈັກເຊື່ອຟັງພຣະເຈົ້າ ແລະ ຄົນທີ່ຈົງຮັກພັກດີຕໍ່ພຣະເຈົ້າ. ພວກເຂົາມີຄວາມຈິງ ແລະ ຄຳພະຍານ ແລະ ມີແຕ່ຄົນເຫຼົ່ານີ້ເທົ່ານັ້ນທີ່ເຮັດໃຫ້ພຣະເຈົ້າເພິ່ງພໍໃຈຢູ່ໃນເຮືອນຂອງພຣະອົງ. ພຣະເຈົ້າຊ່ວຍຄົນເຫຼົ່ານັ້ນທີ່ສາມາດມີຊີວິດໃຫ້ລອດພົ້ນ, ຄົນທີ່ສາມາດແນມເຫັນຄວາມລອດພົ້ນຂອງພຣະເຈົ້າ, ຄົນທີ່ສາມາດຈົງຮັກພັກດີຕໍ່ພຣະເຈົ້າ ແລະ ຄົນທີ່ເຕັມໃຈສະແຫວງຫາພຣະເຈົ້າ. ພຣະອົງຊ່ວຍເຫຼືອຄົນທີ່ເຊື່ອໃນການບັງເກີດເປັນມະນຸດຂອງພຣະອົງ ແລະ ໃນການປາກົດຕົວຂອງພຣະອົງ. ບາງຄົນສາມາດມີຊີວິດ ແລະ ບາງຄົນກໍບໍ່ສາມາດມີ; ສິ່ງນີ້ຂຶ້ນກັບວ່າ ທຳມະຊາດຂອງພວກເຂົາສາມາດຖືກຊ່ວຍໃຫ້ລອດພົ້ນ ຫຼື ບໍ່. ຫຼາຍຄົນໄດ້ຍິນພຣະທຳຂອງພຣະເຈົ້າຢ່າງຫຼວງຫຼາຍ ແຕ່ກໍຍັງບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຍັງບໍ່ສາມາດນຳສິ່ງເຫຼົ່ານັ້ນໄປປະຕິບັດໄດ້. ຜູ້ຄົນດັ່ງກ່າວບໍ່ສາມາດດຳລົງຊີວິດຕາມຄວາມຈິງໃດໆ ແລະ ຍັງຕັ້ງໃຈແຊກແຊງພາລະກິດຂອງພຣະເຈົ້ານຳອີກ. ພວກເຂົາບໍ່ສາມາດປະຕິບັດພາລະກິດໃດໆສຳລັບພຣະເຈົ້າ, ພວກເຂົາບໍ່ສາມາດອຸທິດສິ່ງໃດໜຶ່ງໃຫ້ແກ່ພຣະອົງໄດ້ ແລະ ພວກເຂົາຍັງໃຊ້ເງິນຂອງຄຣິສຕະຈັກຢ່າງລັບໆ ແລະ ກິນລ້າໆຢູ່ໃນເຮືອນຂອງພຣະເຈົ້ານຳອີກ. ຄົນເຫຼົ່ານີ້ຕາຍແລ້ວ ແລະ ພວກເຂົາຈະບໍ່ໄດ້ຖືກຊ່ວຍເຫຼືອໃຫ້ລອດພົ້ນ. ພຣະເຈົ້າຊ່ວຍເຫຼືອທຸກຄົນ ທີ່ຢູ່ທ່າມກາງພາລະກິດຂອງພຣະອົງ, ແຕ່ມີສ່ວນໜຶ່ງ ທີ່ບໍ່ສາມາດໄດ້ຮັບເອົາຄວາມລອດພົ້ນຂອງພຣະອົງ; ມີແຕ່ຈຳນວນໜ້ອຍໜຶ່ງເທົ່ານັ້ນ ທີ່ສາມາດຮັບເອົາຄວາມລອດພົ້ນຂອງພຣະອົງໄດ້. ນີ້ກໍຍ້ອນເພາະຄົນສ່ວນໃຫຍ່ຖືກເຮັດໃຫ້ເສື່ອມຊາມຢ່າງຮຸນແຮງເກີນໄປ ແລະ ໄດ້ກາຍມາເປັນຄົນຕາຍ ແລະ ພວກເຂົາເກີນຄວາມລອດພົ້ນ; ພວກເຂົາຖືກຊູດຣີດໂດຍຊາຕານຈົນໝົດກ້ຽງ ແລະ ພວກເຂົາຊົ່ວຮ້າຍເກີນໄປໃນທຳມະຊາດຂອງພວກເຂົາ. ຄົນຈຳນວນໜ້ອຍຍັງບໍ່ສາມາດເຊື່ອຟັງພຣະເຈົ້າໄດ້ຢ່າງສົມບູນ. ພວກເຂົາບໍ່ແມ່ນຄົນທີ່ຊື່ສັດຕໍ່ພຣະເຈົ້າຢ່າງແທ້ຈິງ ຕັ້ງແຕ່ຕອນເລີ່ມຕົ້ນ ຫຼື ຄົນທີ່ມີຄວາມຮັກສຸດຂີດສຳລັບພຣະເຈົ້າຕັ້ງແຕ່ຕອນເລີ່ມຕົ້ນ; ກົງກັນຂ້າມ, ພວກເຂົາເຊື່ອຟັງພຣະເຈົ້າ ຍ້ອນພາລະກິດແຫ່ງການເອົາຊະນະຂອງພຣະອົງ, ພວກເຂົາເຫັນພຣະເຈົ້າ ຍ້ອນຄວາມຮັກອັນສູງສຸດຂອງພຣະອົງ, ມີການປ່ຽນແປງໃນ

ອຸປະນິໄສຂອງພວກເຂົາ ຍ້ອນອຸປະນິໄສອັນຊອບທຳຂອງພຣະເຈົ້າ ແລະ ພວກເຂົາຮູ້ພຣະເຈົ້າຍ້ອນພາລະກິດຂອງພຣະອົງ ເຊິ່ງເປັນພາລະກິດທີ່ທັງເປັນຈິງ ແລະ ທຳມະດາ. ຖ້າບໍ່ມີພາລະກິດນີ້ຂອງພຣະເຈົ້າ, ບໍ່ວ່າຄົນເຫຼົ່ານີ້ຈະດີພຽງໃດ ພວກເຂົາກໍຍັງເປັນຂອງຊາຕານ, ພວກເຂົາຈະຍັງເປັນຂອງຄວາມຕາຍແລະ ພວກເຂົາຍັງຈະຕາຍຢູ່. ຂໍ້ແທ້ຈິງທີ່ຄົນເຫຼົ່ານີ້ສາມາດຮັບເອົາຄວາມລອດພົ້ນຂອງພຣະເຈົ້າໃນມື້ນີ້ ກໍຍ້ອນວ່າ ພວກເຂົາເຕັມໃຈຮ່ວມມືກັບພຣະເຈົ້າ.

ຍ້ອນຄວາມຈົງຮັກພັກດີຂອງພວກເຂົາຕໍ່ພຣະເຈົ້າ, ຄົນທີ່ມີຊີວິດຈະຖືກພຣະເຈົ້າຮັບເອົາໂດຍພຣະເຈົ້າ ແລະ ດຳລົງຊີວິດຢູ່ທ່າມກາງຄຳສັນຍາຂອງພຣະອົງ ແລະ ຍ້ອນການທີ່ພວກເຂົາຕໍ່ຕ້ານພຣະເຈົ້າ, ຄົນຕາຍຈະຖືກພຣະເຈົ້າກຽດຊັງ ແລະ ປະຕິເສດ ແລະ ດຳລົງຊີວິດຢູ່ທ່າມກາງການລົງໂທດ ແລະ ການສາບແຊ່ງຂອງພຣະອົງ. ສິ່ງດັ່ງກ່າວແມ່ນອຸປະນິໄສອັນຊອບທຳຂອງພຣະເຈົ້າ ເຊິ່ງມະນຸດບໍ່ສາມາດປ່ຽນແປງໄດ້. ຍ້ອນວ່າການສະແຫວງຫາຂອງພວກເຂົາເອງ, ຜູ້ຄົນຈຶ່ງໄດ້ຮັບການເຫັນດີເຫັນພ້ອມຂອງພຣະເຈົ້າ ແລະ ດຳລົງຊີວິດໃນແສງສະຫວ່າງ; ຍ້ອນກົນອຸບາຍທີ່ເລ່ລ່ຽມຂອງພວກເຂົາ, ຜູ້ຄົນຈຶ່ງຖືກພຣະເຈົ້າສາບແຊ່ງ ແລະ ລົງສູ່ການລົງໂທດ; ຍ້ອນການກະທຳຊົ່ວຂອງພວກເຂົາ, ຜູ້ຄົນຈຶ່ງຖືກພຣະເຈົ້າລົງໂທດ ແລະ ຍ້ອນຄວາມປາດຖະໜາ ແລະ ຄວາມຈົງຮັກພັກດີຂອງພວກເຂົາ, ຜູ້ຄົນຈຶ່ງໄດ້ຮັບພອນຂອງພຣະເຈົ້າ. ພຣະເຈົ້າຊອບທຳ: ພຣະອົງອວຍພອນແກ່ຄົນທີ່ມີຊີວິດ ແລະ ສາບແຊ່ງຄົນຕາຍ ເພື່ອໃຫ້ພວກເຂົາຢູ່ທ່າມກາງຄວາມຕາຍຢູ່ສະເໝີ ແລະ ຈະບໍ່ດຳລົງຊີວິດໃນແສງສະຫວ່າງຂອງພຣະເຈົ້າຈັກເທື່ອ. ພຣະເຈົ້າຈະນຳເອົາຄົນທີ່ມີຊີວິດໄປສູ່ອານາຈັກຂອງພຣະອົງ, ສູ່ພອນຂອງພຣະອົງ, ເພື່ອໃຫ້ຢູ່ກັບພຣະອົງຕະຫຼອດໄປ. ແຕ່ສຳລັບຄົນຕາຍ, ພຣະອົງຈະຕີພວກເຂົາ ແລະ ສົ່ງພວກເຂົາໄປສູ່ຄວາມຕາຍຢ່າງນິລັນດອນ; ພວກເຂົາແມ່ນເປົ້າໝາຍແຫ່ງການທຳລາຍຂອງພຣະອົງ ແລະ ຈະເປັນຂອງຊາຕານຢູ່ສະເໝີໄປ. ພຣະເຈົ້າປະຕິບັດຕໍ່ທຸກຄົນຢ່າງຍຸຕິທຳ. ທຸກຄົນທີ່ສະແຫວງຫາພຣະເຈົ້າຢ່າງແທ້ຈິງຈະຍັງຄົງຢູ່ໃນເຮືອນຂອງພຣະເຈົ້າ ແລະ ທຸກຄົນທີ່ບໍ່ເຊື່ອຟັງພຣະເຈົ້າ ແລະ ບໍ່ສາມາດເຂົ້າກັບພຣະອົງໄດ້ແມ່ນຈະດຳລົງຊີວິດຢູ່ທ່າມກາງການລົງໂທດຂອງພຣະອົງຢ່າງແນ່ນອນ. ບາງເທື່ອ ເຈົ້າອາດຈະບໍ່ທັນແນ່ໃຈກ່ຽວກັບພາລະກິດຂອງພຣະເຈົ້າໃນເນື້ອໜັງ ແຕ່ໃນມື້ໜຶ່ງ ເນື້ອໜັງຂອງພຣະເຈົ້າຈະບໍ່ຈັດແຈງຈຸດຈົບຂອງມະນຸດໂດຍກົງ; ກົງກັນຂ້າມ, ພຣະວິນຍານຂອງພຣະອົງຈະຈັດແຈງຈຸດໝາຍປາຍທາງຂອງມະນຸດ ແລະ ໃນເວລານັ້ນ ຜູ້ຄົນຈະຮູ້ວ່າ ເນື້ອໜັງຂອງພຣະເຈົ້າ ແລະ ພຣະວິນຍານຂອງພຣະອົງແມ່ນສິ່ງດຽວກັນ, ເນື້ອໜັງຂອງພຣະອົງບໍ່ສາມາດເຮັດຜິດພາດໄດ້ ແລະ ພຣະວິນຍານຂອງພຣະອົງຍິ່ງບໍ່ສາມາດທີ່ຈະເຮັດຜິດພາດໄດ້. ໃນທີ່ສຸດ, ພຣະອົງຈະນຳເອົາຜູ້ທີ່ມີຊີວິດໄປສູ່ອານາຈັກຂອງພຣະອົງຢ່າງແນ່ນອນ; ໂດຍທີ່ບໍ່ຫຼາຍເກີນໄປແມ່ນແຕ່ຄົນດຽວ ແລະ ບໍ່ໜ້ອຍເກີນໄປແມ່ນແຕ່ຄົນດຽວ. ສຳລັບຄົນຕາຍ ຜູ້ທີ່ບໍ່ມີຊີວິດ, ພວກເຂົາຈະຖືກໂຍນເຂົ້າສູ່ຖໍ້າຂອງຊາຕານ.

# ການບໍ່ປ່ຽນແປງອຸປະນິໄສ ຄືການເປັນປໍລະປັກຕໍ່ພຣະເຈົ້າ

ຫຼັງຈາກຫຼາຍພັນປີຂອງຄວາມເສື່ອມຊາມ, ມະນຸດໄດ້ຕາຍດ້ານ ແລະ ໂງ່ຈ້າ; ພວກເຂົາໄດ້ກາຍເປັນຜີສາດທີ່ຕໍ່ຕ້ານພຣະເຈົ້າ ເຖິງຂັ້ນທີ່ວ່າ ການຕໍ່ຕ້ານຂອງມະນຸດທີ່ມີຕໍ່ພຣະເຈົ້າຖືກບັນທຶກໄວ້ໃນໜັງສືແຫ່ງປະຫວັດສາດ ແລະ ແມ່ນແຕ່ມະນຸດເອງກໍບໍ່ສາມາດອະທິບາຍໄດ້ເຖິງພຶດຕິກຳການຕໍ່ຕ້ານຂອງຕົນ ເນື່ອງຈາກວ່າ ມະນຸດໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງໜັກ ແລະ ຖືກຊາຕານນຳພາໄປໃນທາງທີ່ຜິດຈົນບໍ່ຮູ້ວ່າຈະຫັນໄປທາງໃດດີ. ແມ່ນແຕ່ທຸກມື້ນີ້, ມະນຸດຍັງຄົງທໍລະຍົດຕໍ່ພຣະເຈົ້າ: ເມື່ອມະນຸດແນມເຫັນພຣະເຈົ້າ, ເຂົາກໍທໍລະຍົດຕໍ່ພຣະອົງ ແລະ ເມື່ອເຂົາບໍ່ສາມາດແນມເຫັນພຣະເຈົ້າ, ເຂົາກໍຍັງຄົງທໍລະຍົດຕໍ່ພຣະອົງ. ແລ້ວຍັງມີຜູ້ຄົນ ເຖິງວ່າໄດ້ເຫັນເຖິງການສາບແຊ່ງຂອງພຣະເຈົ້າ ແລະ ຄວາມໂກດຮ້າຍຂອງພຣະອົງ ແຕ່ກໍຍັງທໍລະຍົດຕໍ່ພຣະອົງ. ດ້ວຍເຫດນັ້ນ, ເຮົາຈຶ່ງກ່າວວ່າຄວາມຮູ້ຂອງມະນຸດແມ່ນໄດ້ສູນເສຍໜ້າທີ່ດັ່ງເດີມຂອງມັນໄປແລ້ວ ແລະ ລວມທັງສາມັນສຳນຶກຂອງມະນຸດກໍໄດ້ສູນເສຍໜ້າທີ່ດັ່ງເດີມຂອງມັນເຊັ່ນກັນ. ມະນຸດທີ່ເຮົາແນມເບິ່ງແມ່ນສັດເດຍລະສານທີ່ແຕ່ງກາຍເປັນຄົນ, ເຂົາເປັນງູທີ່ມີພິດຮ້າຍ ແລະ ບໍ່ວ່າເຂົາຈະພະຍາຍາມກະທຳຕົວໃຫ້ໜ້າສົງສານພຽງໃດໃນສາຍຕາຂອງເຮົາກໍຕາມ, ເຮົາກໍຈະບໍ່ມີວັນເມດຕາເຂົາ ເນື່ອງຈາກວ່າ ມະນຸດບໍ່ເຂົ້າໃຈຄວາມແຕກຕ່າງ ລະຫວ່າງ ສີດຳ ແລະ ສີຂາວ ຫຼື ຄວາມແຕກຕ່າງ ລະຫວ່າງ ຄວາມຈິງ ແລະ ຄວາມເທັດ. ຄວາມຮູ້ສຶກຂອງມະນຸດແມ່ນດ້ານຊາຫຼາຍ, ແຕ່ເຖິງຢ່າງນັ້ນ ເຂົາກໍຍັງປາດຖະໜາທີ່ຈະໄດ້ຮັບພອນ; ຄວາມເປັນມະນຸດຂອງເຂົາຕໍ່າຊ້າ ແຕ່ເຖິງຢ່າງນັ້ນ ເຂົາກໍຍັງປາດຖະໜາທີ່ຈະໄດ້ຄອບຄອງອຳນາດຂອງກະສັດ. ການມີຄວາມຮູ້ສຶກແບບນັ້ນເຂົາຈະເປັນກະສັດຂອງໃຜໄດ້? ຜູ້ທີ່ມີຄວາມເປັນມະນຸດແບບນັ້ນຈະນັ່ງເທິງບັນລັງໄດ້ແນວໃດ? ມະນຸດແມ່ນບໍ່ຮູ້ຈັກອາຍແທ້ໆ! ເຂົາເປັນຄົນອວດດີທີ່ໜ້າເວດທະນາທີ່ສຸດ! ສຳລັບພວກເຈົ້າທີ່ປາດຖະໜາຢາກໄດ້ຮັບພອນ, ເຮົາຂໍແນະນຳວ່າ ກ່ອນອື່ນໝົດໃຫ້ພວກເຈົ້າຊອກຫາແວ່ນ ແລະ ແຍງເບິ່ງຄວາມຂີ້ຮ້າຍຂອງພວກເຈົ້າເອງກ່ອນ. ເຈົ້າມີສິ່ງທີ່ເຮັດໃຫ້ເປັນກະສັດໄດ້ບໍ? ເຈົ້າມີໜ້າຕາຂອງຄົນທີ່ສາມາດໄດ້ຮັບພອນບໍ? ບໍ່ໄດ້ມີການປ່ຽນແປງແມ່ນແຕ່ໜ້ອຍດຽວໃນນິໄສຂອງເຈົ້າ ແລະ ເຈົ້າບໍ່ໄດ້ນຳຄວາມຈິງໃດໆໄປປະຕິບັດ ແຕ່ເຖິງຢ່າງນັ້ນ ເຈົ້າກໍຍັງປາດຖະໜາເຖິງອະນາຄົດທີ່ສວຍງາມ. ເຈົ້າກຳລັງຫຼອກລວງຕົນເອງ! ເນື່ອງຈາກວ່າມະນຸດເກີດຢູ່ໃນແຜ່ນດິນທີ່ສົກກະປົກ, ເຂົາໄດ້ຮັບອິດທິພົນຈາກສັງຄົມຢ່າງແຮງ, ເຂົາໄດ້ຮັບອິດທິພົນຈາກຈະລິຍະທຳສັກດິນາ ແລະ ເຂົາໄດ້ຖືກສັ່ງສອນຈາກ "ສະຖາບັນແຫ່ງການສຶກສາຊັ້ນສູງ". ຄວາມຄິດແບບຫຼ້າຫຼັງ, ສິນທຳທີ່ເສື່ອມຊາມ, ມຸມມອງຊີວິດທີ່ຊົ່ວຮ້າຍ, ປັດຊະຍາຊີວິດທີ່ໜ້າລັງກຽດ, ການມີຊີວິດຢູ່ທີ່ໄຮ້ຄຸນຄ່າ ແລະ ການດຳລົງຊີວິດ ແລະ ປະເພນີທີ່ຕໍ່າຊ້າ ສິ່ງທັງໝົດເຫຼົ່ານີ້ລ້ວນແລ້ວແຕ່ໄດ້ບຸກລຸກເຂົ້າໄປໃນຈິດໃຈຂອງມະນຸດຢ່າງຮ້າຍແຮງ, ທັງໄດ້ທຳລາຍ ແລະ ໂຈມຕີສາມັນສຳນຶກຂອງເຂົາຢ່າງຮຸນແຮງ. ຜົນຕາມມາກໍຄື ມະນຸດໄດ້ຫ່າງໄກຈາກພຣະເຈົ້າຫຼາຍຂຶ້ນ ແລະ ຕໍ່ຕ້ານພຣະອົງຍິ່ງຂຶ້ນ. ອຸປະນິໄສຂອງ

ມະນຸດກໍເສື່ອມຊາມຂຶ້ນທຸກມື້ ແລະ ບໍ່ມີໃຜຈັກຄົນທີ່ຍິນດີທີ່ຈະສະຫຼະທຸກສິ່ງເພື່ອພຣະອົງ, ບໍ່ມີແມ່ນແຕ່ຄົນດຽວທີ່ຍິນດີຈະເຊື່ອຟັງພຣະອົງ ຫຼື ຍິ່ງໄປກວ່ານັ້ນ, ບໍ່ມີໃຜເລີຍທີ່ຍິນດີຈະສະແຫວງຫາການປາກົດຕົວຂອງພຣະເຈົ້າ. ໃນທາງກົງກັນຂ້າມ, ພາຍໃຕ້ອຳນາດຂອງຊາຕານ, ມະນຸດບໍ່ເຮັດຫຍັງເລີຍນອກຈາກສະແຫວງຫາຄວາມສຸກສະບາຍ, ປ່ອຍໃຫ້ຕົນເອງເສື່ອມຊາມກັບເນື້ອໜັງໃນດິນແດນແຫ່ງຂີ້ຕົມ. ເຖິງແມ່ນພວກເຂົາຈະໄດ້ຍິນຄວາມຈິງ, ຜູ້ທີ່ຈົມຢູ່ໃນຄວາມມືດກໍບໍ່ຄິດທີ່ຈະນຳເອົາຄວາມຈິງໄປປະຕິບັດ ແລະ ເຖິງແມ່ນວ່າພວກເຂົາໄດ້ເຫັນການປາກົດຕົວຂອງພຣະເຈົ້າ ພວກເຂົາກໍບໍ່ມີແນວໂນ້ມທີ່ຈະສະແຫວງຫາພຣະອົງ. ມະນຸດຊາດທີ່ຕໍ່າຊ້າຈະມີໂອກາດໄດ້ຮັບຄວາມລອດພົ້ນໄດ້ແນວໃດ? ມະນຸດຊາດທີ່ເສື່ອມໂຊມທີ່ສຸດຈະສາມາດດຳລົງຊີວິດຢູ່ໃນແສງສະຫວ່າງໄດ້ແນວໃດ?

ການປ່ຽນແປງອຸປະນິໄສຂອງມະນຸດເລີ່ມຕົ້ນຈາກການຮັບຮູ້ແກ່ນແທ້ຂອງຕົນເອງ ແລະ ຜ່ານການປ່ຽນແປງໃນຄວາມຄິດ, ທາດແທ້ ແລະ ທັດສະນະຄະຕິທາງຈິດໃຈ ໂດຍຜ່ານການປ່ຽນແປງດ້ານພື້ນຖານ. ມີພຽງວິທີນີ້ເທົ່ານັ້ນທີ່ຈະບັນລຸການປ່ຽນແປງອຸປະນິໄສຂອງມະນຸດໄດ້ຢ່າງແທ້ຈິງ. ສາເຫດຕົ້ນຕໍຂອງອຸປະນິໄສທີ່ເສື່ອມຊາມເຊິ່ງເກີດຂຶ້ນໃນມະນຸດຄືການຫຼອກລວງ, ຄວາມເສື່ອມຊາມ ແລະ ພິດຂອງຊາຕານ. ມະນຸດຖືກຜູກມັດ ແລະ ຖືກຄວບຄຸມໂດຍຊາຕານ ແລະ ເຂົາໄດ້ຮັບຄວາມເສຍຫາຍຊົ່ວຮ້າຍທີ່ຊາຕານກໍ່ໃຫ້ເກີດຂຶ້ນກັບຄວາມຄິດ, ສິນທຳ, ການເຂົ້າໃຈຢ່າງເລິກເຊິ່ງ ແລະ ຄວາມຮູ້ສຶກຂອງເຂົາ. ມັນເປັນຍ້ອນເພາະວ່າສິ່ງພື້ນຖານຕ່າງໆຂອງມະນຸດໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ແຕກຕ່າງຈາກການທີ່ພຣະເຈົ້າຊົງສ້າງມະນຸດໃນເບື້ອງຕົ້ນ, ມະນຸດຕໍ່ຕ້ານພຣະເຈົ້າ ແລະ ບໍ່ສາມາດຍອມຮັບຄວາມຈິງ. ດ້ວຍເຫດນັ້ນ, ການປ່ຽນແປງໃນອຸປະນິໄສຂອງມະນຸດຄວນເລີ່ມຕົ້ນຈາກການປ່ຽນແປງຄວາມຄິດ, ການເຂົ້າໃຈຢ່າງເລິກເຊິ່ງ ແລະ ຄວາມຮູ້ສຶກຂອງເຂົາ ເຊິ່ງສິ່ງເຫຼົ່ານີ້ຈະປ່ຽນແປງຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າ ແລະ ຄວາມຮູ້ຂອງເຂົາກ່ຽວກັບຄວາມຈິງ. ຜູ້ຄົນທີ່ເກີດໃນດິນແດນທີ່ເສື່ອມຊາມທີ່ສຸດແມ່ນຍິ່ງບໍ່ຮູ້ເຖິງສິ່ງທີ່ພຣະເຈົ້າເປັນ ຫຼື ແມ່ນຫຍັງຄືຄວາມໝາຍໃນການເຊື່ອພຣະເຈົ້າ. ຍິ່ງມະນຸດເສື່ອມຊາມຫຼາຍເທົ່າໃດ, ມະນຸດກໍຍິ່ງຮູ້ເຖິງການມີຢູ່ຂອງພຣະເຈົ້າໜ້ອຍເທົ່ານັ້ນ ແລະ ຄວາມຮູ້ສຶກ ແລະ ຄວາມເຂົ້າໃຈຂອງພວກເຂົາກໍຍິ່ງຕໍ່າລົງສໍ່ານັ້ນ. ແຫຼ່ງທີ່ມາຂອງການຄັດຄ້ານ ແລະ ການກະບົດຕໍ່ພຣະເຈົ້າຂອງມະນຸດແມ່ນຄວາມເສື່ອມຊາມຂອງເຂົາທີ່ເກີດຈາກຊາຕານ. ເພາະວ່າມະນຸດໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ, ສາມັນສຳນຶກຂອງມະນຸດຈຶ່ງໄດ້ຕາຍດ້ານ, ເປັນຄົນຂາດສິນທຳ, ແນວຄິດຂອງເຂົາກໍຕໍ່າຊາມ ແລະ ເຂົາມີທັດສະນະຄະຕິທີ່ຫຼ້າຫຼັງ. ກ່ອນທີ່ເຂົາໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ, ໂດຍທຳມະຊາດແລ້ວ ມະນຸດແມ່ນຕິດຕາມພຣະເຈົ້າ ແລະ ເຊື່ອຟັງພຣະທຳຂອງພຣະອົງຫຼັງຈາກທີ່ໄດ້ຮັບຟັງພຣະທຳເຫຼົ່ານັ້ນ. ໂດຍທຳມະຊາດແລ້ວ ເຂົາມີຄວາມຮູ້ສຶກນຶກຄິດ ແລະ ມີສາມັນສຳນຶກທີ່ດີ ແລະ ມີຄວາມເປັນມະນຸດທີ່ປົກກະຕິ. ຫຼັງຈາກຖືກຊາຕານເຮັດໃຫ້ເສື່ອມຊາມ, ຄວາມຮູ້ສຶກນຶກຄິດ, ສາມັນສຳນຶກ ແລະ ຄວາມເປັນມະນຸດດັ່ງເດີມຂອງເຂົາກໍຕາຍດ້ານ ແລະ ຖືກຊາຕານເຮັດໃຫ້ເສື່ອມເສຍ. ດ້ວຍເຫດນັ້ນ, ເຂົາຈຶ່ງໄດ້ສູນເສຍຄວາມເຊື່ອຟັງ ແລະ ຄວາມຮັກທີ່ມີຕໍ່ພຣະເຈົ້າ. ຄວາມຮູ້ສຶກນຶກຄິດຂອງມະນຸດໄດ້ວິປະລິດ, ອຸປະນິໄສຂອງເຂົາໄດ້ກາຍເປັນດັ່ງນິໄສຂອງ

ສັດ, ການຕໍ່ຕ້ານຂອງເຂົາຕໍ່ພຣະເຈົ້າແມ່ນເກີດຂຶ້ນເລື້ອຍໆ ແລະ ຮ້າຍແຮງຂຶ້ນຫຼາຍກວ່າເກົ່າ. ແຕ່ເຖິງປານນັ້ນ, ມະນຸດຍັງບໍ່ຮູ້ຈັກ ຫຼື ຮັບຮູ້ເຖິງສິ່ງນີ້ ແລະ ໄດ້ແຕ່ຄັດຄ້ານ ແລະ ຕໍ່ຕ້ານຢ່າງຕາບອດ. ການເປີດເຜີຍອຸປະນິໄສຂອງມະນຸດແມ່ນຖືກເປີດເຜີຍຈາກການສະແດງຄວາມຮູ້ສຶກນຶກຄິດ, ຄວາມເຂົ້າໃຈ ແລະ ສາມັນສຳນຶກຂອງເຂົາ; ຍ້ອນວ່າຄວາມຮູ້ສຶກນຶກຄິດ ແລະ ຄວາມເຂົ້າໃຈຂອງເຂົາບໍ່ໝັ້ນຄົງ ແລະ ສາມັນສຳນຶກຂອງເຂົາໄດ້ຕາຍດ້ານຫຼາຍ, ດ້ວຍເຫດນັ້ນ ອຸປະນິໄສຂອງເຂົາຈຶ່ງຕໍ່ຕ້ານພຣະເຈົ້າ. ຖ້າຄວາມຮູ້ສຶກນຶກຄິດ ແລະ ຄວາມເຂົ້າໃຈຂອງມະນຸດບໍ່ສາມາດປ່ຽນແປງໄດ້, ການປ່ຽນແປງອຸປະນິໄສຂອງເຂົາກໍຍິ່ງເປັນໄປບໍ່ໄດ້ ທີ່ຈະເປັນໄປຕາມຈຸດປະສົງຂອງພຣະເຈົ້າ. ຖ້າຄວາມຮູ້ສຶກນຶກຄິດຂອງມະນຸດບໍ່ໝັ້ນຄົງ, ເຂົາກໍບໍ່ສາມາດຈະຮັບໃຊ້ພຣະເຈົ້າໄດ້ ແລະ ບໍ່ເໝາະສົມທີ່ຈະໃຫ້ພຣະອົງໃຊ້. "ຄວາມຮູ້ສຶກນຶກຄິດທີ່ປົກກະຕິ" ໝາຍເຖິງການເຊື່ອຟັງ ແລະ ການສັດຊື່ຕໍ່ພຣະເຈົ້າ, ການສະແຫວງຫາພຣະເຈົ້າ, ການມີຄວາມແນ່ນອນຕໍ່ພຣະເຈົ້າ ແລະ ການມີສາມັນສຳນຶກຕໍ່ພຣະເຈົ້າ. ມັນໝາຍເຖິງການມີຫົວໃຈ ແລະ ແນວຄິດດຽວຕໍ່ພຣະເຈົ້າ ແລະ ການບໍ່ໄດ້ຕັ້ງໃຈຕໍ່ຕ້ານພຣະເຈົ້າ. ຜູ້ຄົນທີ່ມີຄວາມຮູ້ສຶກນຶກຄິດທີ່ຜິດປົກກະຕິຈະບໍ່ເປັນແບບນີ້. ເນື່ອງຈາກວ່າມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ, ເຂົາໄດ້ສ້າງມະໂນພາບກ່ຽວກັບພຣະເຈົ້າ ແລະ ເຂົາບໍ່ມີຄວາມຈົງຮັກພັກດີ ຫຼື ບໍ່ມີການສະແຫວງຫາພຣະເຈົ້າ, ແຮງໄກທີ່ເຂົາຈະມີສາມັນສຳນຶກຕໍ່ພຣະອົງ. ມະນຸດແມ່ນຕໍ່ຕ້ານ ແລະ ຕັດສິນພຣະເຈົ້າໂດຍເຈດຕະນາ ແລະ ຍິ່ງໄປກວ່ານັ້ນ ຍັງກ່າວໝິ່ນປະໝາດຫຼັບຫຼັງພຣະອົງ. ມະນຸດຮູ້ດີວ່າພຣະອົງຊົງເປັນພຣະເຈົ້າ ແຕ່ເຖິງປານນັ້ນກໍຍັງຕັດສິນພຣະອົງຫຼັບຫຼັງ ໂດຍບໍ່ມີຄວາມຕັ້ງໃຈທີ່ຈະເຊື່ອຟັງພຣະອົງ ແລະ ພຽງແຕ່ຮຽກຮ້ອງ ແລະ ຮ້ອງຂໍຈາກພຣະອົງແບບບໍ່ມືນຫູມືນຕາ. ຄົນດັ່ງກ່າວນັ້ນກໍຄື ຄົນທີ່ມີຄວາມຮູ້ສຶກນຶກຄິດຜິດປົກກະຕິແມ່ນບໍ່ສາມາດຮູ້ພຶດຕິກຳທີ່ໜ້າລັງກຽດຂອງຕົນ ຫຼື ຮູ້ສຶກເສຍໃຈຕໍ່ການກະບົດຂອງພວກເຂົາ. ຖ້າຜູ້ຄົນສາມາດຮູ້ຈັກຕົນເອງ, ແລ້ວ ພວກເຂົາກໍຈະໄດ້ຮັບຄວາມຮູ້ສຶກນຶກຄິດຂອງຕົນເລັກນ້ອຍ; ຍິ່ງຜູ້ຄົນຕໍ່ຕ້ານພຣະເຈົ້າຫຼາຍເທົ່າໃດ ແຕ່ບໍ່ຮູ້ຈັກຕົນເອງ, ພວກເຂົາກໍຍິ່ງມີຄວາມຮູ້ສຶກນຶກຄິດນ້ອຍເທົ່ານັ້ນ.

ແຫຼ່ງທີ່ມາຂອງການເປີດເຜີຍອຸປະນິໄສທີ່ເສື່ອມຊາມຂອງມະນຸດບໍ່ແມ່ນສິ່ງໃດ ແຕ່ເປັນສາມັນສຳນຶກທີ່ຕາຍດ້ານ, ທຳມະສາດທີ່ໂຫດຮ້າຍ ແລະ ຄວາມຮູ້ສຶກນຶກຄິດບໍ່ດີຂອງເຂົາ; ຖ້າສາມັນສຳນຶກ ແລະ ຄວາມຮູ້ສຶກນຶກຄິດຂອງມະນຸດສາມາດກັບມາເປັນປົກກະຕິອີກຄັ້ງ, ແລ້ວເຂົາກໍຈະເໝາະສົມໃຫ້ພຣະເຈົ້ານຳໃຊ້. ມັນເປັນຍ້ອນວ່າສາມັນສຳນຶກຂອງມະນຸດໄດ້ຕາຍດ້ານຢູ່ສະເໝີ ແລະ ຍ້ອນຄວາມຮູ້ສຶກນຶກຄິດຂອງມະນຸດຕາຍດ້ານຂຶ້ນເລື້ອຍໆ ມະນຸດຈຶ່ງຕໍ່ຕ້ານພຣະເຈົ້າຫຼາຍຂຶ້ນ ເຊິ່ງພວກເຂົາເຖິງກັບຄຶງພຣະເຢຊູໃສ່ໄມ້ກາງແຂນ ແລະ ປະຕິເສດພຣະເຈົ້າທີ່ບັງເກີດເປັນມະນຸດຂອງຍຸກສຸດທ້າຍບໍ່ໃຫ້ເຂົ້າໄປໃນເຮືອນຂອງພວກເຂົາ, ທັງປະນາມເນື້ອໜັງຂອງພຣະເຈົ້າ ແລະ ເຫັນເນື້ອໜັງຂອງພຣະອົງເປັນສິ່ງຕໍ່າຊ້າ. ຖ້າມະນຸດມີຄວາມເປັນມະນຸດເລັກນ້ອຍ, ພວກເຂົາກໍຄົງບໍ່ປະຕິບັດຢ່າງຊົ່ວຮ້າຍຕໍ່ພຣະເຈົ້າຜູ້ບັງເກີດເປັນມະນຸດ; ຖ້າມະນຸດມີຄວາມຮູ້ສຶກນຶກຄິດເລັກນ້ອຍ, ພວກເຂົາກໍຄົງບໍ່ປະຕິບັດຢ່າງໂຫດຮ້າຍຕໍ່ພຣະເຈົ້າຜູ້ບັງເກີດເປັນມະນຸດ; ຖ້າເຂົາມີສາມັນສຳນຶກເລັກນ້ອຍ, ເຂົາຄົງບໍ່ພາກັນ

"ຕອບແທນ" ພຣະເຈົ້າຜູ້ບັງເກີດເປັນມະນຸດແບບນີ້. ມະນຸດອາໄສຢູ່ໃນສະໄໝທີ່ພຣະເຈົ້າບັງເກີດເປັນມະນຸດ ແຕ່ເຖິງຢ່າງນັ້ນ ເຂົາກໍບໍ່ສາມາດຂອບໃຈພຣະເຈົ້າສຳລັບການມອບໂອກາດພິເສດນີ້ໃຫ້ກັບເຂົາ ແຕ່ໃນທາງກົງກັນຂ້າມ ເຂົາສາບແຊ່ງການສະເດັດມາຂອງພຣະເຈົ້າ ຫຼື ເມີນເສີຍຕໍ່ຄວາມຈິງກ່ຽວກັບພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ເບິ່ງຄືກັບວ່າພວກເຂົາຈະຕໍ່ຕ້ານ ແລະ ເບື່ອໜ່າຍພຣະອົງດ້ວຍຊໍ້າ. ບໍ່ວ່າມະນຸດຈະປະຕິບັດຕໍ່ການສະເດັດມາຂອງພຣະເຈົ້າດ້ວຍວິທີໃດກໍຕາມ, ສະຫຼຸບກໍຄື ເຖິງແມ່ນວ່າມະນຸດບໍ່ໄດ້ສະແດງການຕ້ອນຮັບຕໍ່ພຣະອົງແມ່ນແຕ່ໜ້ອຍດຽວ ແລະ ຮ້ອງຂໍຈາກພຣະອົງແບບບໍ່ມີນຫູມີນຕາກໍຕາມ ພຣະອົງຍັງດຳເນີນພາລະກິດຂອງພຣະອົງຢ່າງອົດທົນສະເໝີ. ອຸປະນິໄສຂອງມະນຸດແມ່ນໂຫດຮ້າຍທີ່ສຸດ, ຄວາມຮູ້ສຶກນຶກຄິດຂອງມະນຸດແມ່ນຕາຍດ້ານຢ່າງໜັກ ແລະ ສາມັນສຳນຶກຂອງມະນຸດໄດ້ຖືກສິ່ງຊົ່ວຮ້າຍຢຽບຢໍ້າຈົນສິ້ນຊາກ ແລະ ບໍ່ມີສາມັນສຳນຶກດັ່ງເດີມຂອງມະນຸດແຕ່ດົນນານມາແລ້ວ. ມະນຸດບໍ່ພຽງແຕ່ເນລະຄຸນຕໍ່ພຣະເຈົ້າທີ່ບັງເກີດເປັນມະນຸດ ສຳລັບການປະທານຊີວິດ ແລະ ມອບພຣະຄຸນຢ່າງຫຼວງຫຼາຍແກ່ມວນມະນຸດ, ແຕ່ຍັງບໍ່ພໍໃຈກັບພຣະເຈົ້າທີ່ໄດ້ປະທານຄວາມຈິງແກ່ພວກເຂົາອີກດ້ວຍ; ມັນເປັນຍ້ອນວ່າມະນຸດບໍ່ໃສ່ໃຈໃນຄວາມຈິງແມ່ນແຕ່ໜ້ອຍດຽວ ຈຶ່ງເຮັດໃຫ້ພວກເຂົາເລີ່ມບໍ່ພໍໃຈກັບພຣະເຈົ້າ. ມະນຸດບໍ່ພຽງແຕ່ບໍ່ສາມາດສະຫຼະຊີວິດຂອງເຂົາເພື່ອພຣະເຈົ້າທີ່ບັງເກີດເປັນມະນຸດ, ແຕ່ເຂົາຍັງພະຍາຍາມດຶງເອົາຄວາມນິຍົມຊົມຊອບຈາກພຣະອົງ ແລະ ຮຽກຮ້ອງເອົາຜົນປະໂຫຍດຫຼາຍກວ່າສິ່ງທີ່ມະນຸດໄດ້ມອບໃຫ້ພຣະເຈົ້າຫຼາຍເທົ່າຕົວອີກດ້ວຍ. ຜູ້ຄົນທີ່ມີສາມັນສຳນຶກ ແລະ ຄວາມຮູ້ສຶກ ຄິດວ່າສິ່ງນີ້ບໍ່ແມ່ນເລື່ອງໃຫຍ່ ແລະ ຍັງເຊື່ອວ່າ ພວກເຂົາໄດ້ເສຍສະຫຼະຕົວເອງຫຼາຍເພື່ອພຣະເຈົ້າ ແລະ ພຣະເຈົ້າໄດ້ໃຫ້ກັບພວກເຂົາໜ້ອຍເກີນໄປ. ມີຜູ້ຄົນທີ່ໄດ້ໃຫ້ນໍ້າໜຶ່ງຂັນແກ່ເຮົາ ແຕ່ຍື່ນມືຂອງເຂົາ ແລະ ຮຽກຮ້ອງໃຫ້ເຮົາເອົານົມສອງຂັນໃຫ້ພວກເຂົາ ຫຼື ໄດ້ໃຫ້ຫ້ອງພັກກັບເຮົາໜຶ່ງຄືນ ແຕ່ຮຽກຮ້ອງໃຫ້ເຮົາຈ່າຍຄ່າເຊົ່າສອງຄືນ. ດ້ວຍຄວາມເປັນມະນຸດແບບນີ້ ແລະ ດ້ວຍສາມັນສຳນຶກແບບນີ້, ເຈົ້າຍັງຫວັງຈະໄດ້ຮັບຊີວິດຢູ່ບໍ? ເຈົ້າຊ່າງແມ່ນຄົນຕໍ່າຊ້າທີ່ໜ້າເວດທະນາແທ້ໆ! ຍ້ອນຄວາມເປັນມະນຸດແບບນີ້ ແລະ ມີສາມັນສຳນຶກແບບນີ້ ຈຶ່ງເຮັດໃຫ້ພຣະເຈົ້າທີ່ບັງເກີດເປັນມະນຸດເດີນທາງໄປທົ່ວດິນແດນ ໂດຍບໍ່ມີທີ່ພັກພິງອາໄສ. ຜູ້ທີ່ມີສາມັນສຳນຶກ ແລະ ຄວາມເປັນມະນຸດທີ່ແທ້ຈິງຄວນນະມັດສະການ ແລະ ຮັບໃຊ້ພຣະເຈົ້າທີ່ບັງເກີດເປັນມະນຸດດ້ວຍໃຈຈິງ, ບໍ່ແມ່ນຍ້ອນຈຳນວນພາລະກິດທີ່ພຣະອົງໄດ້ກະທຳ ແຕ່ຍ້ອນວ່າ ເຖິງແມ່ນວ່າພຣະອົງຈະບໍ່ກະທຳການໃດເລີຍກໍຕາມ. ນີ້ແມ່ນສິ່ງທີ່ຄວນຖືກກະທຳໂດຍຜູ້ຄົນທີ່ມີຄວາມຮູ້ສຶກນຶກຄິດທີ່ຖືກຕ້ອງ ແລະ ມັນເປັນໜ້າທີ່ຂອງມະນຸດ. ຜູ້ຄົນສ່ວນໃຫຍ່ເຖິງກັບເວົ້າເຖິງເງື່ອນໄຂຂອງພວກເຂົາໃນການຮັບໃຊ້ພຣະອົງ: ພວກເຂົາບໍ່ໄດ້ສົນໃຈວ່າພຣະອົງເປັນພຣະເຈົ້າ ຫຼື ມະນຸດ, ພວກເຂົາເວົ້າເຖິງພຽງເງື່ອນໄຂຂອງຕົນເອງ ແລະ ສະແຫວງຫາເຮັດໃຫ້ພໍໃຈຕາມຄວາມປາຖະໜາຂອງພວກເຂົາເອງ. ເມື່ອພວກເຈົ້າຄົວອາຫານໃຫ້ແກ່ເຮົາ ພວກເຈົ້າກໍຮຽກຮ້ອງຄ່າບໍລິການ, ເມື່ອພວກເຈົ້າແລ່ນເພື່ອເຮົາ ພວກເຈົ້າກໍຖາມຫາຄ່າແລ່ນ, ເມື່ອພວກເຈົ້າເຮັດວຽກເພື່ອເຮົາ ພວກເຈົ້າກໍຕ້ອງການຄ່າແຮງງານ, ເມື່ອພວກເຈົ້າຊັກເຄື່ອງໃຫ້ແກ່ເຮົາ ພວກເຈົ້າກໍຕ້ອງການຄ່າຊັກເຄື່ອງ, ເມື່ອພວກເຈົ້າສະໜອງໃຫ້ແກ່ຄຣິສຕະຈັກ

ພວກເຈົ້າກໍຕ້ອງການຄ່າຕອບແທນ, ເມື່ອພວກເຈົ້າເວົ້າ ພວກເຈົ້າກໍຕ້ອງການຄ່າເວົ້າ, ເມື່ອພວກເຈົ້າມອບປື້ມ ພວກເຈົ້າກໍຕ້ອງການຄ່າແຈກຢາຍ ແລະ ເມື່ອພວກເຈົ້າຂຽນ ພວກເຈົ້າກໍຕ້ອງການຄ່າຂຽນ. ຜູ້ຄົນທີ່ເຮົາໄດ້ຈັດການກໍຍັງຕ້ອງການຄ່າຊົດເຊີຍຈາກເຮົາ, ໃນຂະນະທີ່ຜູ້ທີ່ຖືກສົ່ງກັບບ້ານຕ້ອງການຄ່າຊົດໃຊ້ທີ່ພວກເຂົາເສຍຊື່ສຽງ; ຜູ້ຄົນທີ່ບໍ່ໄດ້ແຕ່ງດອງ ຕ້ອງການຄ່າສິນສອດ ຫຼື ຄ່າເຮັດຂວັນສຳລັບຄວາມໜຸ່ມທີ່ສູນເສຍໄປ, ຜູ້ຄົນທີ່ຂ້າໄກ່ຕ້ອງການຄ່າຂ້າ, ຜູ້ທີ່ຈືນອາຫານຕ້ອງການຄ່າຈືນ ແລະ ຜູ້ທີ່ເຮັດແກງ ຕ້ອງການຄ່າເຮັດແກງເຊັ່ນກັນ... ນີ້ຄືຄວາມເປັນມະນຸດຂອງພວກເຈົ້າທີ່ທະນົງຕົວ ແລະ ຍິ່ງໃຫຍ່ ແລະ ນີ້ຄືການກະທຳທີ່ຖືກບົງການໂດຍສາມັນສຳນຶກທີ່ຮ້ອນຮົນຂອງພວກເຈົ້າ. ຄວາມຮູ້ສຶກນຶກຄິດຂອງພວກເຈົ້າຢູ່ໃສ? ຄວາມເປັນມະນຸດຂອງພວກເຈົ້າຢູ່ໃສ? ເຮົາຈະບອກພວກເຈົ້າດັ່ງນີ້! ຖ້າພວກເຈົ້າສືບຕໍ່ເຮັດແບບນີ້, ເຮົາຈະຢຸດຕິພາລະກິດຂອງເຮົາໃນພວກເຈົ້າ. ເຮົາຈະບໍ່ເຮັດພາລະກິດໃນທ່າມກາງຝູງສັດຮ້າຍທີ່ຢູ່ໃນຮ່າງຂອງມະນຸດ, ເຮົາຈະບໍ່ທົນທຸກເພື່ອກຸ່ມຄົນທີ່ໜ້າຊື່ໃຈຄົດ, ເຮົາຈະບໍ່ອົດກັ້ນເພື່ອຝູງສັດທີ່ບໍ່ມີໂອກາດແມ່ນແຕ່ໜ້ອຍທີ່ຈະໄດ້ຮັບຄວາມລອດພົ້ນ. ມື້ທີ່ເຮົາຫັນຫຼັງໃຫ້ແກ່ພວກເຈົ້າແມ່ນມື້ທີ່ພວກເຈົ້າເສຍຊີວິດ, ມັນແມ່ນມື້ທີ່ຄວາມມືດເຂົ້າມາປົກຄຸມພວກເຈົ້າ ແລະ ເປັນມື້ທີ່ພວກເຈົ້າຖືກປະຖິ້ມດ້ວຍແສງສະຫວ່າງ. ເຮົາຈະບອກພວກເຈົ້າແນວນີ້! ເຮົາຈະບໍ່ມີຄວາມເມດຕາຕໍ່ກຸ່ມຄົນເຊັ່ນພວກເຈົ້າ, ກຸ່ມທີ່ຕ້ອຍຕໍ່າຍິ່ງກວ່າສັດ! ພຣະທຳ ແລະ ການກະທຳຂອງເຮົາແມ່ນມີຂີດຈຳກັດ ແລະ ດ້ວຍຄວາມເປັນມະນຸດ ແລະ ສາມັນສຳນຶກທີ່ພວກເຈົ້າມີ, ເຮົາຈະບໍ່ເຮັດພາລະກິດອີກ ເພາະວ່າພວກເຈົ້າຂາດສາມັນສຳນຶກ, ພວກເຈົ້າໄດ້ເຮັດໃຫ້ເຮົາເຈັບປວດແສນສາຫັດ ແລະ ພຶດຕິກຳທີ່ໜ້າລັງກຽດຂອງພວກເຈົ້າເຮັດໃຫ້ເຮົາລັງກຽດຫຼາຍ. ຜູ້ຄົນທີ່ຂາດຄວາມເປັນມະນຸດ ແລະ ສາມັນສຳນຶກຈະບໍ່ມີວັນໄດ້ຮັບຄວາມລອດພົ້ນ; ເຮົາຈະບໍ່ຊ່ວຍຜູ້ຄົນທີ່ບໍ່ມີຫົວໃຈ ແລະ ບໍ່ສຳນຶກບຸນຄຸນ. ເມື່ອວັນຂອງເຮົາມາເຖິງ, ເຮົາຈະປ່ອຍແປວໄຟທີ່ແຜດໄໝ້ຊົ່ວນິດນິລັນຂອງເຮົາລົງໃສ່ບຸດແຫ່ງຄວາມບໍ່ເຊື່ອຟັງທີ່ຄັ້ງໜຶ່ງໄດ້ທ້າທາຍຄວາມໂກດຮ້າຍຢ່າງແຮງຂອງເຮົາ, ເຮົາຈະກຳນົດການລົງໂທດອັນເປັນນິດນິລັນຂອງເຮົາຕໍ່ຝູງສັດທີ່ຄັ້ງໜຶ່ງໄດ້ປະນາມເຮົາ ແລະ ປະຖິ້ມເຮົາ, ເຮົາຈະເຜົາບຸດແຫ່ງຄວາມບໍ່ເຊື່ອຟັງທີ່ຄັ້ງໜຶ່ງເຄີຍກິນ ແລະ ຢູ່ຮ່ວມກັບເຮົາແຕ່ບໍ່ໄດ້ເຊື່ອໃນເຮົາ, ທັງດູຖູກ ແລະ ທັກຫຼັງເຮົາ ດ້ວຍໄຟທີ່ບໍ່ມີວັນດັບຈາກຄວາມໂກດຮ້າຍຂອງເຮົາ. ເຮົາຈະເຮັດໃຫ້ຜູ້ທີ່ທ້າທາຍຄວາມໂກດຮ້າຍຂອງເຮົາໄດ້ຮັບໂທດ, ເຮົາຈະຖອກເທຄວາມໂກດຮ້າຍທັງໝົດຂອງເຮົາລົງສູ່ສັດຮ້າຍເຫຼົ່ານັ້ນທີ່ຄັ້ງໜຶ່ງເຄີຍປາຖະໜາທີ່ຈະຢືນຄຽງຂ້າງທຽບເທົ່າກັບເຮົາ ແຕ່ບໍ່ໄດ້ນະມັດສະການ ຫຼື ເຊື່ອຟັງເຮົາ, ໄມ້ຄ້ອນທີ່ເຮົາໃຊ້ຂ້ຽນຕີມະນຸດຈະຕົກໃສ່ສັດເຫຼົ່ານັ້ນທີ່ຄັ້ງໜຶ່ງ ເຄີຍມີຄວາມສຸກກັບການເບິ່ງແຍງຂອງເຮົາ ແລະ ຄວາມເລິກລັບທີ່ເຮົາໄດ້ກ່າວ ແລະ ຜູ້ທີ່ຄັ້ງໜຶ່ງເຄີຍພະຍາຍາມເອົາຄວາມສຸກແຫ່ງວັດຖຸຈາກເຮົາ. ເຮົາຈະບໍ່ໃຫ້ອະໄພໃຜທີ່ພະຍາຍາມມາແທນທີ່ເຮົາ; ເຮົາຈະບໍ່ລະເວັ້ນຜູ້ທີ່ພະຍາຍາມຈະສວຍໂອກາດເອົາອາຫານ ແລະ ເຄື່ອງນຸ່ງຫົ່ມຈາກເຮົາ. ສຳລັບຕອນນີ້, ພວກເຈົ້າຍັງເປັນອິດສະຫຼະຈາກອັນຕະລາຍ ແລະ ສືບຕໍ່ຮຽກຮ້ອງຈາກເຮົາຢ່າງທະເຍີທະຍານ. ເມື່ອວັນແຫ່ງຄວາມໂກດຮ້າຍມາເຖິງ ພວກເຈົ້າຈະບໍ່ໄດ້ຮຽກຮ້ອງຫຍັງຈາກເຮົາອີກ; ໃນເວລານັ້ນ, ເຮົາຈະໃຫ້ພວກເຈົ້າ "ມ່ວນຊື່ນ" ກັບຕົນເອງຢ່າງຕາມ

ສະບາຍໃຈ, ເຮົາຈະຍູ້ໜ້າພວກເຈົ້າລົງສູ່ດິນ ແລະ ພວກເຈົ້າຈະບໍ່ສາມາດລຸກຂຶ້ນໄດ້ອີກ! ບໍ່ໄວກໍຊ້າ, ເຮົາຈະ "ຕອບແທນ" ໜີ້ນີ້ຄືນແກ່ພວກເຈົ້າ ແລະ ເຮົາຫວັງວ່າ ພວກເຈົ້າຈະອົດທົນລໍຖ້າການມາເຖິງຂອງວັນນັ້ນ.

ຖ້າຜູ້ຄົນທີ່ໜ້າລັງກຽດເຫຼົ່ານີ້ສາມາດປະຖິ້ມຄວາມຕ້ອງການທີ່ເກີນຂອບເຂດຂອງພວກເຂົາ ແລະ ກັບມາຫາພຣະເຈົ້າ, ແລ້ວພວກເຂົາກໍຍັງມີໂອກາດທີ່ຈະໄດ້ຮັບຄວາມລອດພົ້ນ; ຖ້າມະນຸດມີຫົວໃຈທີ່ໂຫຍຫາພຣະເຈົ້າຢ່າງແທ້ຈິງ, ແລ້ວເຂົາກໍຈະບໍ່ຖືກພຣະອົງປະຖິ້ມ. ມະນຸດລົ້ມເຫຼວທີ່ຈະໄດ້ຮັບພຣະເຈົ້າ ບໍ່ແມ່ນຍ້ອນພຣະອົງມີຄວາມຮູ້ສຶກ ຫຼື ຍ້ອນພຣະອົງບໍ່ຍອມໃຫ້ມະນຸດໄດ້ຮັບພຣະອົງ ແຕ່ຍ້ອນມະນຸດບໍ່ຕ້ອງການຮັບເອົາພຣະເຈົ້າ ແລະ ເປັນຍ້ອນມະນຸດບໍ່ໄດ້ສະແຫວງຫາພຣະອົງດ້ວຍໃຈທີ່ຮ້ອນຮົນ. ບຸກຄົນທີ່ສະແຫວງຫາພຣະເຈົ້າດ້ວຍໃຈຈິງຈະຖືກສາບແຊ່ງໂດຍພຣະອົງໄດ້ແນວໃດ? ຜູ້ທີ່ມີຄວາມຮູ້ສຶກນຶກຄິດທີ່ຖືກຕ້ອງ ແລະ ມີສາມັນສຳນຶກທີ່ດີຈະຖືກພຣະເຈົ້າສາບແຊ່ງໄດ້ແນວໃດ? ຜູ້ທີ່ມະນັດສະການ ແລະ ຮັບໃຊ້ພຣະເຈົ້າດ້ວຍໃຈຈິງຈະຖືກໄຟແຫ່ງຄວາມໂກດຮ້າຍຂອງພຣະອົງເຜົາໄໝ້ໄດ້ຢ່າງໃດ? ຜູ້ທີ່ເຕັມໃຈເຊື່ອຟັງພຣະອົງຈະຖືກເຕະອອກຈາກເຮືອນຂອງພຣະອົງໄດ້ແນວໃດ? ຜູ້ທີ່ບໍ່ສາມາດຢຸດຮັກພຣະອົງຈະຕົກຢູ່ໃນການລົງໂທດຂອງພຣະອົງໄດ້ແນວໃດ? ຜູ້ທີ່ເຕັມໃຈທີ່ຈະປະຖິ້ມທຸກສິ່ງເພື່ອພຣະອົງຈະຖືກປ່ອຍປະໃຫ້ສູນເສຍທຸກສິ່ງໄດ້ແນວໃດ? ມະນຸດບໍ່ເຕັມໃຈທີ່ຈະສະແຫວງຫາພຣະເຈົ້າ, ບໍ່ເຕັມໃຈທີ່ຈະສະຫຼະຊັບສິນຂອງຕົນເພື່ອພຣະເຈົ້າ, ບໍ່ເຕັມໃຈທີ່ຈະອຸທິດຄວາມພະຍາຍາມຕະຫຼອດຊີວິດເພື່ອພຣະເຈົ້າ ແຕ່ກົງກັນຂ້າມພາກັນເວົ້າວ່າພຣະອົງກະທຳເກີນໄປ, ສິ່ງທີ່ພຣະເຈົ້າເຮັດເກີນໄປແມ່ນບໍ່ກົງກັບແນວຄິດຂອງມະນຸດ. ດ້ວຍຄວາມເປັນມະນຸດແບບນີ້, ເຖິງແມ່ນວ່າພວກເຈົ້າທຸ້ມເທໃນຄວາມພະຍາຍາມຂອງພວກເຈົ້າ ພວກເຈົ້າກໍຍັງຈະບໍ່ສາມາດໄດ້ຮັບການເຫັນດີຈາກພຣະເຈົ້າ, ແຮງໄກຖ້າພວກເຈົ້າບໍ່ສະແຫວງຫາພຣະເຈົ້າ. ພວກເຈົ້າບໍ່ຮູ້ບໍວ່າ ພວກເຈົ້າເປັນຜົນຜະລິດທີ່ມີຂໍ້ບົກຜ່ອງຂອງມະນຸດຊາດ? ພວກເຈົ້າບໍ່ຮູ້ບໍວ່າ ບໍ່ມີຄວາມເປັນມະນຸດໃດທີ່ຕໍ່າຊ້າກວ່າຄວາມເປັນມະນຸດຂອງພວກເຈົ້າ? ພວກເຈົ້າບໍ່ຮູ້ບໍວ່າແມ່ນຫຍັງທີ່ຄົນອື່ນເອີ້ນພວກເຈົ້າ? ຜູ້ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງເອີ້ນພວກເຈົ້າວ່າ ບິດາຂອງໝາປ່າ, ມານດາຂອງໝາປ່າ, ບຸດຂອງໝາປ່າ ແລະ ລູກຫຼານຂອງໝາປ່າ; ພວກເຈົ້າແມ່ນທາຍາດຂອງໝາປ່າ, ຜູ້ຄົນຂອງໝາປ່າ ແລະ ພວກເຈົ້າຄວນຮູ້ຈັກຕົວຕົນຂອງພວກເຈົ້າເອງ ແລະ ຢ່າໄດ້ລືມມັນ. ຢ່າໄດ້ຄິດວ່າ ພວກເຈົ້າເປັນສິ່ງທີ່ສູງສົ່ງ: ພວກເຈົ້າເປັນກຸ່ມທີ່ບໍ່ແມ່ນມະນຸດທີ່ຊົ່ວຮ້າຍທີ່ສຸດໃນທ່າມກາງມະນຸດຊາດ. ພວກເຈົ້າບໍ່ຮູ້ສິ່ງນີ້ເລີຍບໍ? ພວກເຈົ້າຮູ້ບໍວ່າ ເຮົາຕ້ອງສ່ຽງເທົ່າໃດໂດຍການເຮັດພາລະກິດທ່າມກາງພວກເຈົ້າ? ຖ້າຄວາມຮູ້ສຶກນຶກຄິດຂອງພວກເຈົ້າບໍ່ສາມາດກັບມາເປັນປົກກະຕິອີກຄັ້ງ ແລະ ສາມັນສຳນຶກຂອງພວກເຈົ້າບໍ່ສາມາດເຮັດວຽກເປັນປົກກະຕິ, ແລ້ວພວກເຈົ້າກໍຈະບໍ່ມີວັນຫຼຸດພົ້ນອອກຈາກສາຍານາມ "ໝາປ່າ" ໄດ້, ພວກເຈົ້າຈະບໍ່ມີທາງໜີພົ້ນວັນແຫ່ງການສາບແຊ່ງໄດ້ ແລະ ຈະບໍ່ມີທາງໜີພົ້ນວັນແຫ່ງການລົງໂທດຂອງພວກເຈົ້າໄດ້. ພວກເຈົ້າເກີດມາຕໍ່າຕ້ອຍ ແລະ ເປັນສິ່ງທີ່ບໍ່ມີຄ່າ. ໂດຍທຳມະຊາດແລ້ວພວກເຈົ້າຄືຝູງໝາປ່າທີ່ຫິວໂຫຍ, ເປັນສິ່ງເສດເຫຼືອ ແລະ ກອງຂີ້ເຫຍື້ອ ແລະ ບໍ່ຄືພວກເຈົ້າ ເຮົາບໍ່ໄດ້

ເຮັດພາລະກິດຕໍ່ພວກເຈົ້າເພື່ອຮັບຄວາມນິຍົມຊົມຊອບ ແຕ່ຍ້ອນມີຄວາມຈຳເປັນຕ້ອງເຮັດພາລະກິດ. ຖ້າພວກເຈົ້າຍັງສືບຕໍ່ກະບົດແບບນີ້, ເຮົາຈະຢຸດພາລະກິດຂອງເຮົາ ແລະ ຈະບໍ່ເຮັດພາລະກິດຕໍ່ພວກເຈົ້າອີກ; ໃນທາງກົງກັນຂ້າມ, ເຮົາຈະໂອນພາລະກິດຂອງເຮົາໃຫ້ກັບກຸ່ມອື່ນທີ່ເຮັດໃຫ້ເຮົາພໍໃຈ ແລະ ດ້ວຍວິທີນີ້ ກໍຈະປະຖິ້ມພວກເຈົ້າຕະຫຼອດໄປ ເພາະວ່າເຮົາບໍ່ເຕັມໃຈເຝົ້າເບິ່ງຜູ້ຄົນທີ່ເປັນປໍລະປັກກັບເຮົາ. ສະນັ້ນ, ພວກເຈົ້າປາດຖະໜາທີ່ເຂົ້າກັບເຮົາໃຫ້ໄດ້ບໍ ຫຼື ເປັນປໍລະປັກກັບເຮົາ?

# ທຸກຄົນທີ່ບໍ່ຮູ້ຈັກພຣະເຈົ້າຄືຄົນທີ່ຕໍ່ຕ້ານພຣະເຈົ້າ

ເພື່ອເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າ, ຜົນກະທົບທີ່ພາລະກິດຂອງພຣະອົງບັນລຸໃນມະນຸດ ແລະ ສິ່ງທີ່ເປັນຄວາມປະສົງແທ້ໆຂອງພຣະອົງສຳລັບມະນຸດ: ນີ້ແມ່ນສິ່ງທີ່ທຸກຄົນທີ່ຕິດຕາມພຣະເຈົ້າຄວນບັນລຸ. ໃນທຸກມື້ນີ້ ຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າເປັນພຽງແຕ່ສິ່ງທີ່ທຸກຄົນກຳລັງຂາດ. ການກະທຳທີ່ພຣະເຈົ້າໄດ້ເຮັດພາລະກິດຕໍ່ຜູ້ຄົນ, ພາລະກິດທັງໝົດຂອງພຣະເຈົ້າ ແລະ ສິ່ງທີ່ເປັນຄວາມປະສົງແທ້ໆຂອງພຣະເຈົ້າສຳລັບມະນຸດ ນັບຕັ້ງແຕ່ການເນລະມິດສ້າງໂລກຈົນເຖິງເວລາໃນປັດຈຸບັນ, ສິ່ງເຫຼົ່ານີ້ຄືສິ່ງທີ່ມະນຸດບໍ່ຮູ້ ຫຼື ເຂົ້າໃຈ. ຄວາມຂາດເຂີນນີ້ບໍ່ພຽງແຕ່ເຫັນໄດ້ທົ່ວໂລກສາສະໜາ, ແຕ່ຍັງໃນທຸກຄົນທີ່ເຊື່ອໃນພຣະເຈົ້າ. ເມື່ອມື້ທີ່ເຈົ້າຫຼຽວເຫັນພຣະເຈົ້າຢ່າງແທ້ຈິງໄດ້ມາເຖິງ, ເມື່ອເຈົ້າຊື່ນຊົມສະຕິປັນຍາຂອງພຣະອົງຢ່າງແທ້ຈິງ, ເມື່ອເຈົ້າຫຼຽວເຫັນທຸກການກະທຳທີ່ພຣະເຈົ້າໄດ້ເຮັດພາລະກິດ, ເມື່ອເຈົ້າຮັບຮູ້ເຖິງສິ່ງທີ່ພຣະເຈົ້າເປັນ ແລະ ມີ, ເມື່ອເຈົ້າໄດ້ເຫັນຄວາມອຸດົມສົມບູນຂອງພຣະອົງ, ສະຕິປັນຍາ, ສິ່ງອັດສະຈັນ ແລະ ທຸກສິ່ງທີ່ພຣະອົງໄດ້ເຮັດພາລະກິດໃນຜູ້ຄົນ, ມັນກໍ່ເປັນຕອນນັ້ນເອງທີ່ເຈົ້າຈະບັນລຸຄວາມສຳເລັດໃນຄວາມເຊື່ອຂອງເຈົ້າໃນພຣະເຈົ້າ. ເມື່ອເວົ້າວ່າພຣະເຈົ້າຮອບຮູ້ທຸກດ້ານ ແລະ ອຸດົມສົມບູນທຸກຢ່າງ, ພຣະອົງຮອບຮູ້ທຸກດ້ານໃນລັກສະນະໃດແທ້ໆ ແລະ ພຣະອົງອຸດົມສົມບູນທຸກຢ່າງໃນລັກສະນະໃດ? ຖ້າເຈົ້າບໍ່ເຂົ້າໃຈສິ່ງນີ້, ແລ້ວກໍ່ບໍ່ຖືວ່າເຈົ້າເຊື່ອໃນພຣະເຈົ້າ. ເປັນຫຍັງເຮົາຈຶ່ງເວົ້າວ່າຄົນທີ່ຢູ່ໃນໂລກສາສະໜາແມ່ນຜູ້ບໍ່ເຊື່ອໃນພຣະເຈົ້າແຕ່ເປັນຜູ້ເຮັດການຊົ່ວ, ເປັນພັກພວກດຽວກັນກັບມານຮ້າຍ? ເມື່ອເຮົາເວົ້າວ່າພວກເຂົາເປັນຜູ້ເຮັດການຊົ່ວ, ມັນເປັນເພາະພວກເຂົາບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ບໍ່ສາມາດເບິ່ງເຫັນສະຕິປັນຍາຂອງພຣະອົງ. ພຣະເຈົ້າບໍ່ເຄີຍເປີດເຜີຍພາລະກິດຂອງພຣະອົງໃຫ້ແກ່ພວກເຂົາ. ພວກເຂົາຕາບອດ; ພວກເຂົາບໍ່ສາມາດເຫັນການກະທຳຂອງພຣະເຈົ້າ, ພວກເຂົາໄດ້ຖືກປະຖິ້ມໂດຍພຣະເຈົ້າ ແລະ ພວກເຂົາຂາດການດູແລ ແລະ ການປົກປ້ອງຈາກພຣະເຈົ້າຢ່າງສົມບູນ, ແຮງບໍ່ຕ້ອງເວົ້າເຖິງພາລະກິດຂອງພຣະວິນຍານບໍລິສຸດເລີຍ. ຄົນທີ່ບໍ່ມີພາລະກິດຂອງພຣະເຈົ້າກໍ່ລ້ວນແລ້ວແຕ່ເປັນຄົນເຮັດການຊົ່ວ ແລະ ຄູ່ປໍລະປັກກັບພຣະເຈົ້າ. ຄູ່ປໍລະປັກຂອງພຣະເຈົ້າທີ່ເຮົາກ່າວເຖິງແມ່ນຄົນທີ່ບໍ່ຮູ້ຈັກພຣະເຈົ້າ, ຄົນທີ່ຮັບຮູ້ພຣະເຈົ້າດ້ວຍຮິມສົບຂອງພວກເຂົາ ແຕ່ບໍ່ຮູ້ຈັກພຣະອົງ, ຄົນທີ່ຕິດຕາມພຣະເຈົ້າແຕ່ບໍ່ເຊື່ອຟັງພຣະອົງ ແລະ ຄົນທີ່ມ່ວນຊື່ນໃນຄວາມກະລຸນາຂອງພຣະເຈົ້າ ແຕ່ບໍ່ສາມາດຢືນເປັນພະຍານໃຫ້ກັບພຣະອົງ. ຖ້າບໍ່ມີຄວາມເຂົ້າໃຈກ່ຽວກັບຈຸດປະສົງໃນພາລະກິດຂອງພຣະເຈົ້າ ຫຼື ຄວາມເຂົ້າໃຈກ່ຽວກັບພາລະກິດທີ່ພຣະເຈົ້າເຮັດໃນມະນຸດ, ເຂົາກໍ່ບໍ່ສາມາດເຮັດຕາມຄວາມປະສົງຂອງພຣະເຈົ້າ ຫຼື ເຂົາບໍ່ສາມາດຢືນເປັນພະຍານໃຫ້ກັບພຣະເຈົ້າ. ໃນດ້ານໜຶ່ງ, ເຫດຜົນທີ່ວ່າເປັນຫຍັງມະນຸດຈຶ່ງຕໍ່ຕ້ານພຣະເຈົ້າແມ່ນເກີດມາຈາກອຸປະນິໄສທີ່ເສື່ອມຊາມຂອງເຂົາ ແລະ ໃນອີກດ້ານໜຶ່ງມັນກໍ່ມາຈາກການບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ການຂາດຄວາມເຂົ້າໃຈກ່ຽວກັບຫຼັກການທີ່ພຣະເຈົ້າປະຕິບັດພາລະກິດ ແລະ ກ່ຽວກັບຄວາມປະສົງຂອງພຣະອົງສຳລັບມະນຸດ. ທັງສອງລັກສະນະ

ນີ້ເມື່ອນຳມາໃສ່ກັນໄດ້ປະກອບເປັນປະຫວັດສາດທີ່ມະນຸດຕໍ່ຕ້ານພຣະເຈົ້າ. ຜູ້ເຊື່ອໃໝ່ຕໍ່ຕ້ານພຣະເຈົ້າ ເພາະການຕໍ່ຕ້ານດັ່ງກ່າວນອນຢູ່ພາຍໃນທຳມະຊາດຂອງພວກເຂົາ, ໃນຂະນະທີ່ການຕໍ່ຕ້ານພຣະເຈົ້າຂອງຄົນທີ່ມີຄວາມເຊື່ອຫຼາຍປີແມ່ນມີຜົນມາຈາກການບໍ່ມີຄວາມຮູ້ກ່ຽວກັບພຣະອົງ ນອກຈາກອຸປະນິໄສທີ່ເສື່ອມຊາມຂອງພວກເຂົາ. ໃນເວລາກ່ອນທີ່ພຣະເຈົ້າກາຍມາເປັນເນື້ອໜັງ, ການວັດແທກວ່າມະນຸດຕໍ່ຕ້ານພຣະເຈົ້າ ຫຼື ບໍ່ ແມ່ນອີງໃສ່ວ່າເຂົາຮັກສາບົດບັນຍັດທີ່ພຣະເຈົ້າໃນສະຫວັນໄດ້ກຳນົດໄວ້ ຫຼື ບໍ່. ຕົວຢ່າງ: ໃນຍຸກແຫ່ງພຣະບັນຍັດ, ຜູ້ໃດກໍ່ຕາມທີ່ບໍ່ຮັກສາພຣະບັນຍັດຂອງພຣະເຢໂຮວາກໍ່ຖືວ່າເປັນຄົນທີ່ຕໍ່ຕ້ານພຣະເຈົ້າ; ຜູ້ໃດກໍ່ຕາມທີ່ລັກຈາກເຄື່ອງຖວາຍໃຫ້ແກ່ພຣະເຢໂຮວາ ຫຼື ຜູ້ໃດກໍ່ຕາມທີ່ຕໍ່ຕ້ານຄົນທີ່ພຣະເຢໂຮວາໂປດປານກໍ່ຖືວ່າເປັນຄົນທີ່ຕໍ່ຕ້ານພຣະເຈົ້າ ແລະ ຈະຖືກແກວ່ງກ້ອນຫີນໃສ່ຈົນຕາຍ; ຜູ້ໃດກໍ່ຕາມທີ່ບໍ່ເຄົາລົບບິດາ ແລະ ມານດາຂອງເຂົາ ແລະ ຜູ້ໃດກໍ່ຕາມທີ່ໂຈມຕີ ຫຼື ສາບແຊ່ງຄົນອື່ນກໍ່ຖືວ່າເປັນຄົນທີ່ບໍ່ຮັກສາພຣະບັນຍັດ. ແລ້ວທຸກຄົນທີ່ບໍ່ຮັກສາພຣະບັນຍັດຂອງພຣະເຢໂຮວາກໍ່ຖືວ່າກຳລັງຢືນຕໍ່ຕ້ານພຣະອົງ. ສິ່ງນີ້ບໍ່ໄດ້ເປັນແບບນັ້ນໃນຍຸກແຫ່ງພຣະຄຸນ, ເມື່ອຜູ້ໃດກໍ່ຕາມທີ່ຢືນຕໍ່ຕ້ານພຣະເຢຊູຈະຖືວ່າເປັນຄົນທີ່ຕໍ່ຕ້ານພຣະເຈົ້າ ແລະ ຜູ້ໃດກໍ່ຕາມທີ່ບໍ່ເຊື່ອຟັງພຣະທຳທີ່ພຣະເຢຊູໄດ້ກ່າວອອກກໍ່ຖືວ່າເປັນຄົນທີ່ຢືນຕໍ່ຕ້ານພຣະເຈົ້າ. ໃນເວລານີ້, ລັກສະນະທີ່ກຳນົດການຕໍ່ຕ້ານພຣະເຈົ້າໄດ້ເລີ່ມຖືກຕ້ອງ ແລະ ເປັນຈິງຍິ່ງຂຶ້ນ. ໃນເວລາທີ່ພຣະເຈົ້າຍັງບໍ່ທັນໄດ້ກາຍມາເປັນເນື້ອໜັງ, ການວັດແທກທີ່ວ່າມະນຸດຕໍ່ຕ້ານພຣະເຈົ້າ ຫຼື ບໍ່ ແມ່ນອີງໃສ່ວ່າມະນຸດນະມັດສະການ ແລະ ເຄົາລົບພຣະເຈົ້າທີ່ບໍ່ສາມາດເບິ່ງເຫັນໄດ້ໃນສະຫວັນ ຫຼື ບໍ່. ລັກສະນະທີ່ກຳນົດການຕໍ່ຕ້ານພຣະເຈົ້າໃນເວລານັ້ນບໍ່ໄດ້ເປັນຈິງເລີຍ, ຍ້ອນມະນຸດບໍ່ສາມາດເຫັນພຣະເຈົ້າ ຫຼື ເຂົາບໍ່ຮູ້ວ່າພາບລັກຂອງພຣະເຈົ້າເປັນແນວໃດ ຫຼື ພຣະອົງປະຕິບັດພາລະກິດ ແລະ ກ່າວແນວໃດ. ມະນຸດບໍ່ມີແນວຄິດກ່ຽວກັບພຣະເຈົ້າ ແລະ ເຂົາເຊື່ອໃນພຣະເຈົ້າໂດຍບໍ່ແຈ່ມແຈ້ງ, ເພາະພຣະເຈົ້າບໍ່ທັນປາກົດຕົວຕໍ່ມະນຸດ. ສະນັ້ນ, ບໍ່ວ່າມະນຸດຈະເຊື່ອໃນພຣະເຈົ້າແນວໃດກໍ່ຕາມໃນຈິນຕະນາການຂອງເຂົາ, ພຣະເຈົ້າບໍ່ໄດ້ປະນາມມະນຸດ ຫຼື ຮຽກຮ້ອງຈາກເຂົາຫຼາຍເກີນໄປ, ເພາະມະນຸດບໍ່ສາມາດເຫັນພຣະເຈົ້າແທ້ໆ. ເມື່ອພຣະເຈົ້າກາຍມາເປັນເນື້ອໜັງ ແລະ ມາເຮັດພາລະກິດທ່າມກາງມະນຸດ, ທຸກຄົນກໍ່ເບິ່ງເຫັນພຣະອົງ ແລະ ໄດ້ຍິນພຣະທຳຂອງພຣະອົງ ແລະ ທຸກຄົນໄດ້ເຫັນເຖິງການກະທຳທີ່ພຣະເຈົ້າເຮັດພາລະກິດພາຍໃນຮ່າງກາຍເນື້ອໜັງຂອງພຣະອົງ. ໃນຊ່ວງເວລານັ້ນ, ແນວຄິດທັງໝົດຂອງມະນຸດໄດ້ກາຍມາເປັນຟອງສະບູ່. ສຳລັບຄົນທີ່ເຫັນພຣະເຈົ້າປາກົດຕົວໃນເນື້ອໜັງ, ພວກເຂົາຈະບໍ່ຖືກປະນາມ ຖ້າພວກເຂົາເຕັມໃຈເຊື່ອຟັງພຣະອົງ, ໃນຂະນະທີ່ຄົນທີ່ຢືນຕໍ່ຕ້ານພຣະອົງໂດຍຕັ້ງໃຈຈະຖືກປະນາມດັ່ງຄູ່ປໍລະປັກຂອງພຣະເຈົ້າ. ຄົນດັ່ງກ່າວແມ່ນຜູ້ຕໍ່ຕ້ານພຣະຄຣິດ, ສັດຕູທີ່ຕັ້ງໃຈຢືນຕໍ່ຕ້ານພຣະເຈົ້າ. ຄົນທີ່ມີແນວຄິດກ່ຽວກັບພຣະເຈົ້າ ແຕ່ຍັງກຽມພ້ອມ ແລະ ເຕັມໃຈທີ່ຈະເຊື່ອພຣະອົງກໍ່ຈະບໍ່ຖືກປະນາມ. ພຣະເຈົ້າປະນາມມະນຸດບົນພື້ນຖານເຈດຕະນາ ແລະ ການກະທຳຂອງມະນຸດ, ບໍ່ແມ່ນສຳລັບຄວາມຄິດ ແລະ ແນວຄິດຂອງເຂົາ. ຖ້າພຣະອົງຕ້ອງປະນາມມະນຸດບົນພື້ນຖານຄວາມຄິດ ແລະ ແນວຄິດຂອງເຂົາ, ແລ້ວບໍ່ມີແມ່ນແຕ່ຄົນດຽວທີ່ຈະສາມາດໜີລອດຈາກມືທີ່ໂຫດຮ້າຍຂອງພຣະເຈົ້າ. ຄົນທີ່ເຕັມໃຈຢືນ

ຕໍ່ຕ້ານພຣະເຈົ້າທີ່ບັງເກີດເປັນມະນຸດກໍ່ຈະຖືກລົງໂທດສຳລັບຄວາມບໍ່ເຊື່ອຟັງຂອງພວກເຂົາ. ກ່ຽວກັບຄົນເຫຼົ່ານີ້ທີ່ເຕັມໃຈຕໍ່ຕ້ານພຣະເຈົ້າ, ອຸປະນິໄສຂອງພວກເຂົາເກີດມາຈາກຂໍ້ແທ້ຈິງທີ່ພວກເຂົາມີແນວຄິດກ່ຽວກັບພຣະເຈົ້າ ເຊິ່ງເຮັດໃຫ້ພວກເຂົາມີການກະທຳທີ່ຂັດຂວາງພາລະກິດຂອງພຣະເຈົ້າ. ຄົນເຫຼົ່ານີ້ຕັ້ງໃຈຕໍ່ຕ້ານ ແລະ ທຳລາຍພາລະກິດຂອງພຣະເຈົ້າ. ພວກເຂົາບໍ່ພຽງແຕ່ມີແນວຄິດກ່ຽວກັບພຣະເຈົ້າ, ແຕ່ພວກເຂົາຍັງມີສ່ວນຮ່ວມໃນກິດຈະກຳທີ່ຂັດຂວາງພາລະກິດຂອງພຣະອົງ ແລະ ດ້ວຍເຫດຜົນນີ້ ຄົນປະເພດນີ້ຈຶ່ງຖືກປະນາມ. ຄົນທີ່ບໍ່ຕັ້ງໃຈຂັດຂວາງພາລະກິດຂອງພຣະເຈົ້າກໍ່ຈະບໍ່ຖືກປະນາມດັ່ງຜູ້ເຮັດບາບ, ເພາະພວກເຂົາສາມາດຕັ້ງໃຈເຊື່ອຟັງ ແລະ ບໍ່ມີສ່ວນຮ່ວມໃນກິດຈະກຳທີ່ກໍ່ໃຫ້ເກີດການຂັດຂວາງ ແລະ ການລົບກວນ. ຄົນແບບນີ້ຈະບໍ່ຖືກປະນາມ. ເຖິງຢ່າງໃດກໍ່ຕາມ, ເມື່ອຜູ້ຄົນໄດ້ປະສົບກັບພາລະກິດຂອງພຣະເຈົ້າເປັນເວລາຫຼາຍປີ, ຖ້າພວກເຂົາສືບຕໍ່ມີແນວຄິດກ່ຽວກັບພຣະເຈົ້າ ແລະ ຍັງບໍ່ສາມາດຮູ້ຈັກພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ບໍ່ວ່າພວກເຂົາໄດ້ປະສົບກັບພາລະກິດຂອງພຣະອົງເປັນເທົ່າໃດປີກໍ່ຕາມ ຖ້າພວກເຂົາສືບຕໍ່ເຕັມໄປດ້ວຍແນວຄິດກ່ຽວກັບພຣະເຈົ້າ ແລະ ຍັງບໍ່ສາມາດມາຮູ້ຈັກພຣະອົງໄດ້, ແລ້ວເຖິງແມ່ນວ່າພວກເຂົາບໍ່ໄດ້ມີສ່ວນຮ່ວມໃນກິດຈະກຳທີ່ຂັດຂວາງ, ເຖິງແນວໃດກໍ່ຕາມ ຫົວໃຈຂອງພວກເຂົາແມ່ນເຕັມໄປດ້ວຍແນວຄິດຫຼາຍຢ່າງກ່ຽວກັບພຣະເຈົ້າ ແລະ ເຖິງແມ່ນວ່າແນວຄິດເຫຼົ່ານີ້ບໍ່ໄດ້ຊັດແຈ້ງ, ຄົນແບບນີ້ກໍ່ບໍ່ມີປະໂຫຍດຫຍັງຕໍ່ພາລະກິດຂອງພຣະເຈົ້າ. ພວກເຂົາບໍ່ສາມາດເຜີຍແຜ່ຂ່າວປະເສີດສຳລັບພຣະເຈົ້າ ຫຼື ຢືນເປັນພະຍານໃຫ້ກັບພຣະອົງ. ຄົນແບບນີ້ບໍ່ມີຫຍັງດີ ແລະ ເປັນຄົນໂງ່. ເພາະພວກເຂົາບໍ່ຮູ້ຈັກພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ພວກເຂົາບໍ່ສາມາດປະຖິ້ມແນວຄິດຂອງພວກເຂົາກ່ຽວກັບພຣະອົງຢ່າງສິ້ນເຊີງ, ສະນັ້ນ ພວກເຂົາຈຶ່ງຖືກປະນາມ. ມັນສາມາດເວົ້າໄດ້ແບບນີ້: ມັນເປັນເລື່ອງປົກກະຕິທີ່ຜູ້ເຊື່ອໃໝ່ຈະມີແນວຄິດກ່ຽວກັບພຣະເຈົ້າ ຫຼື ບໍ່ຮູ້ຫຍັງກ່ຽວກັບພຣະອົງ, ແຕ່ສຳລັບຄົນທີ່ເຊື່ອໃນພຣະເຈົ້າເປັນເວລາຫຼາຍປີ ແລະ ປະສົບກັບພາລະກິດຂອງພຣະອົງຢ່າງຫຼວງຫຼາຍ, ມັນບໍ່ແມ່ນເລື່ອງປົກກະຕິທີ່ຄົນແບບນັ້ນຈະສືບຕໍ່ມີແນວຄິດ ແລະ ມັນເຖິງກັບເປັນເລື່ອງປົກກະຕິໜ້ອຍລົງທີ່ຄົນແບບນີ້ຈະບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າ. ມັນເປັນເພາະນີ້ບໍ່ແມ່ນສະພາວະປົກກະຕິ, ພວກເຂົາຈຶ່ງຖືກປະນາມ. ຄົນທີ່ບໍ່ປົກກະຕິເຫຼົ່ານີ້ລ້ວນແລ້ວແຕ່ເປັນຂີ້ເຫຍື້ອ; ພວກເຂົາເປັນຄົນທີ່ຕໍ່ຕ້ານພຣະເຈົ້າທີ່ສຸດ ແລະ ຄົນທີ່ໄດ້ຮັບຄວາມກະລຸນາຂອງພຣະເຈົ້າຢ່າງເສຍລ້າ. ທຸກຄົນທີ່ເປັນແບບນັ້ນຈະຖືກກຳຈັດໃນທີ່ສຸດ!

ຜູ້ໃດກໍ່ຕາມທີ່ບໍ່ເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າແມ່ນຄົນທີ່ຕໍ່ຕ້ານພຣະອົງ ແລະ ຄົນທີ່ໄດ້ມາເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າ ແຕ່ຍັງບໍ່ສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າພໍໃຈ ຍິ່ງຖືວ່າເປັນຄູ່ປໍລະປັກຂອງພຣະເຈົ້າ. ມີຄົນທີ່ອ່ານພຣະຄຳພີໃນຄຣິດຕະຈັກຫຼັງໃຫຍ່ໂຕ ແລະ ທ່ອງຈຳພຣະຄຳພີໝົດມື້ໝົດຄືນ ແຕ່ບໍ່ມີໃຜເລີຍໃນບັນດາພວກເຂົາທີ່ເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າ. ບໍ່ມີໃຜເລີຍໃນບັນດາພວກເຂົາທີ່ສາມາດຮູ້ຈັກພຣະເຈົ້າ; ແຮງໄກທີ່ຈະມີຜູ້ໃດໃນບັນດາພວກເຂົາເຮັດຕາມຄວາມປະສົງຂອງພຣະເຈົ້າ. ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ໄຮ້ຄ່າ ແລະ ຊົ່ວຮ້າຍ, ແຕ່ລະຄົນກໍ່ຢືນຂຶ້ນສູງເພື່ອສັ່ງສອນພຣະເຈົ້າ. ພວກເຂົາຕັ້ງໃຈຕໍ່ຕ້ານພຣະເຈົ້າ ເຖິງແມ່ນວ່າ

ພວກເຂົາແບກທຸງຂອງພຣະອົງ ໂດຍອ້າງວ່າເຊື່ອໃນພຣະເຈົ້າ, ພວກເຂົາຍັງກິນເນື້ອໜັງ ແລະດື່ມເລືອດຂອງມະນຸດ. ຄົນດັ່ງກ່າວຄືຜີຮ້າຍທີ່ກືນກິນວິນຍານຂອງມະນຸດ, ເປັນຫົວໜ້າຂອງມານຮ້າຍທີ່ຕັ້ງໃຈຂວາງທາງຄົນທີ່ພະຍາຍາມຍ່າງເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ ແລະ ເປັນອຸປະສັກທີ່ກີດຂວາງຄົນທີ່ສະແຫວງຫາພຣະເຈົ້າ. ພວກເຂົາອາດປາກົດວ່າມີ "ລັດຖະທຳມະນູນທີ່ດີ" ແຕ່ຜູ້ຕິດຕາມຂອງພວກເຂົາຮູ້ໄດ້ແນວໃດວ່າພວກເຂົາເປັນພຽງແຕ່ຜູ້ຕໍ່ຕ້ານພຣະຄຣິດທີ່ນຳພາຜູ້ຄົນໃຫ້ຕໍ່ຕ້ານພຣະເຈົ້າ? ຜູ້ຕິດຕາມຂອງພວກເຂົາຈະຮູ້ໄດ້ແນວໃດວ່າພວກເຂົາເປັນມານຮ້າຍທີ່ມີຊີວິດຢູ່ທີ່ອຸທິດຕົນໃຫ້ກັບການກືນກິນວິນຍານຂອງມະນຸດ? ຄົນທີ່ເທີດທູນຕົນເອງຢູ່ສູງຕໍ່ໜ້າພຣະເຈົ້າແມ່ນມະນຸດທີ່ຕໍ່າຊ້າທີ່ສຸດ, ໃນຂະນະທີ່ຄົນທີ່ຖ່ອມຕົນແມ່ນຄົນທີ່ມີກຽດທີ່ສຸດ. ແລ້ວຄົນທີ່ຄິດວ່າພວກເຂົາຮູ້ຈັກພາລະກິດຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ຄົນທີ່ສາມາດປະກາດພາລະກິດຂອງພຣະເຈົ້າໃຫ້ແກ່ຄົນອື່ນດ້ວຍການປ່າວປະກາດໂຄສະນາຢ່າງຍິ່ງໃຫຍ່ຄືກັບວ່າພວກເຂົາຫຼຽວເບິ່ງພຣະອົງໂດຍກົງ, ຄົນເຫຼົ່ານີ້ແມ່ນມະນຸດທີ່ໄຮ້ຄວາມຮູ້ທີ່ສຸດ. ຄົນແບບນັ້ນບໍ່ມີຄຳພະຍານກ່ຽວກັບພຣະເຈົ້າ ແລະ ເຕັມໄປດ້ວຍຄວາມຫຼອກລວງ. ຄົນທີ່ເຊື່ອວ່າພວກເຂົາມີຄວາມຮູ້ກ່ຽວກັບພຣະເຈົ້າໜ້ອຍເກີນໄປ ເຖິງແມ່ນຈະມີປະສົບການຕົວຈິງ ແລະ ຄວາມຮູ້ຕົວຈິງກ່ຽວກັບພຣະອົງ ແມ່ນຄົນທີ່ພຣະອົງຮັກຫຼາຍທີ່ສຸດ. ມີແຕ່ຄົນແບບນັ້ນຈຶ່ງມີຄຳພະຍານຢ່າງແທ້ຈິງ ແລະ ສາມາດຖືກພຣະເຈົ້າເຮັດໃຫ້ສົມບູນຢ່າງແທ້ຈິງ. ຄົນທີ່ບໍ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າຄືຄູ່ປໍລະປັກຂອງພຣະເຈົ້າ; ຄົນທີ່ເຂົ້າໃຈຄວາມປະສົງຂອງພຣະເຈົ້າແຕ່ບໍ່ປະຕິບັດຄວາມຈິງແມ່ນຄູ່ປໍລະປັກຂອງພຣະເຈົ້າ; ຄົນທີ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າແຕ່ຍັງຕໍ່ຕ້ານແກ່ນແທ້ໃນພຣະທຳຂອງພຣະເຈົ້າ ແມ່ນຄູ່ປໍລະປັກຂອງພຣະເຈົ້າ; ຄົນທີ່ມີແນວຄິດກ່ຽວກັບພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ຍິ່ງໄປກວ່ານັ້ນ ຄົນທີ່ມີຄວາມຄິດທີ່ຈະມີສ່ວນຮ່ວມໃນການກະບົດ ແມ່ນຄູ່ປໍລະປັກຂອງພຣະເຈົ້າ; ຄົນທີ່ຕັດສິນພຣະເຈົ້າແມ່ນຄູ່ປໍລະປັກຂອງພຣະເຈົ້າ; ແລະຜູ້ໃດກໍ່ຕາມທີ່ບໍ່ສາມາດຮູ້ຈັກພຣະເຈົ້າ ຫຼື ເປັນພະຍານໃຫ້ກັບພຣະອົງແມ່ນຄູ່ປໍລະປັກຂອງພຣະເຈົ້າ. ສະນັ້ນ ເຮົາຈຶ່ງຮ້ອງຂໍເຈົ້າວ່າ: ຖ້າເຈົ້າມີຄວາມເຊື່ອແທ້ໆວ່າເຈົ້າສາມາດຍ່າງໃນເສັ້ນທາງນີ້, ແລ້ວກໍ່ໃຫ້ຕິດຕາມມັນຕໍ່. ແຕ່ຖ້າເຈົ້າບໍ່ສາມາດຫ້າມຕົນເອງຈາກການຕໍ່ຕ້ານພຣະເຈົ້າ, ແລ້ວມັນຈະດີທີ່ສຸດຖ້າເຈົ້າຍ່າງອອກໄປກ່ອນທີ່ມັນຈະຊ້າເກີນໄປ. ຖ້າບໍ່ດັ່ງນັ້ນ, ໂອກາດທີ່ສິ່ງຕ່າງໆທີ່ໂຫດຮ້າຍສຳລັບເຈົ້າກໍ່ຈະມີສູງຫຼາຍ ເພາະທຳມະຊາດຂອງເຈົ້າເສື່ອມຊາມເກີນໄປແທ້ໆ. ເມື່ອເວົ້າເຖິງຄວາມຈົງຮັກພັກດີ ຫຼື ຄວາມເຊື່ອຟັງ ຫຼື ຫົວໃຈທີ່ຫິວກະຫາຍຫາຄວາມຊອບທຳ ແລະ ຄວາມຈິງ ຫຼື ຄວາມຮັກສຳລັບພຣະເຈົ້າ, ເຈົ້າບໍ່ມີພວກມັນແມ່ນແຕ່ໜ້ອຍດຽວເລີຍ. ມັນອາດເວົ້າໄດ້ວ່າສະຖານະການຂອງເຈົ້າຕໍ່ໜ້າພຣະເຈົ້າຄືຄວາມໂກລາຫົນ. ເຈົ້າບໍ່ສາມາດດຳລົງຕາມສິ່ງທີ່ເຈົ້າຄວນດຳລົງຕາມ ແລະ ບໍ່ສາມາດເວົ້າສິ່ງທີ່ຄວນເວົ້າ. ສິ່ງທີ່ເຈົ້າຄວນນຳໄປປະຕິບັດ, ເຈົ້າກໍ່ລົ້ມເຫຼວທີ່ຈະນຳໄປປະຕິບັດ; ແລະ ໜ້າທີ່ເຈົ້າຄວນປະຕິບັດ, ເຈົ້າກໍ່ບໍ່ສາມາດປະຕິບັດໄດ້. ເຈົ້າບໍ່ມີຄວາມຈົງຮັກພັກດີ, ຄວາມສຳນຶກ, ຄວາມເຊື່ອຟັງ ຫຼື ຄວາມຕັ້ງທີ່ເຈົ້າຄວນມີ. ເຈົ້າບໍ່ໄດ້ອົດກັ້ນກັບການທົນທຸກທີ່ເຈົ້າຈຳເປັນຕ້ອງທົນທຸກ ແລະ ເຈົ້າບໍ່ມີຄວາມເຊື່ອທີ່ເຈົ້າຄວນມີ. ເວົ້າງ່າຍໆກໍ່ຄື ເຈົ້າຂາດຄຸນງາມຄວາມດີແທ້ໆ: ເຈົ້າບໍ່ອາຍບໍທີ່ຈະສືບຕໍ່ມີຊີວິດ

ແບບນັ້ນ? ໃຫ້ເຮົາຊັກຈູງເຈົ້າເພື່ອວ່າເຈົ້າຈະຫຼັບຕາລົງເພື່ອພັກຜ່ອນຕະຫຼອດການ, ແລ້ວເຮັດໃຫ້ພຣະເຈົ້າບໍ່ກັງວົນກ່ຽວກັບເລື່ອງຂອງເຈົ້າ ແລະ ທົນທຸກເພື່ອເຫັນແກ່ເຈົ້າ. ເຈົ້າເຊື່ອໃນພຣະເຈົ້າ ແຕ່ບໍ່ຮູ້ຈັກຄວາມປະສົງຂອງພຣະອົງ; ເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແຕ່ບໍ່ສາມາດຮັກສາສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ. ເຈົ້າເຊື່ອໃນພຣະເຈົ້າ ແຕ່ບໍ່ຮູ້ຈັກພຣະອົງ ແລະ ເຈົ້າຍັງມີຊີວິດຢູ່ໂດຍບໍ່ມີເປົ້າໝາຍໃຫ້ດີ້ນຣົນ, ບໍ່ມີຄຸນຄ່າໃດໆ, ບໍ່ມີຄວາມໝາຍໃດໆ. ເຈົ້າມີຊີວິດດັ່ງມະນຸດ ແຕ່ຍັງບໍ່ມີຄວາມສຳນຶກ, ຄວາມຊື່ສັດ ຫຼື ຄວາມໜ້າເຊື່ອຖືແມ່ນແຕ່ໜ້ອຍດຽວ, ເຈົ້າຍັງສາມາດເອີ້ນຕົນເອງວ່າມະນຸດບໍ? ເຈົ້າເຊື່ອໃນພຣະເຈົ້າ ແຕ່ຍັງຫຼອກລວງພຣະອົງ; ຍິ່ງໄປກວ່ານັ້ນ ເຈົ້າເອົາເງິນຂອງພຣະເຈົ້າ ແລະ ກິນເຄື່ອງຖວາຍທີ່ຖືກຈັດໃຫ້ກັບພຣະອົງ. ແລ້ວໃນທີ່ສຸດ ເຈົ້າກໍ່ຍັງລົ້ມເຫຼວທີ່ຈະສະແດງຄວາມຄຳນຶງແມ່ນແຕ່ໜ້ອຍດຽວຕໍ່ຄວາມຮູ້ສຶກຂອງພຣະເຈົ້າ ຫຼື ຄວາມສຳນຶກແມ່ນແຕ່ໜ້ອຍດຽວຕໍ່ພຣະອົງ. ເຈົ້າບໍ່ສາມາດບັນລຸແມ່ນແຕ່ການຮຽກຮ້ອງທີ່ເລັກນ້ອຍທີ່ສຸດຂອງພຣະເຈົ້າ. ເຈົ້າຍັງສາມາດເອີ້ນຕົນເອງວ່າມະນຸດບໍ? ການກິນອາຫານທີ່ພຣະເຈົ້າຈັດກຽມໃຫ້ເຈົ້າ ແລະ ການຫາຍໃຈເອົາອົກຊີແຊນທີ່ພຣະອົງມອບໃຫ້ເຈົ້າ, ການເພີດເພີນກັບຄວາມກະລຸນາຂອງພຣະອົງ ແຕ່ໃນທີ່ສຸດແລ້ວເຈົ້າບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າແມ່ນແຕ່ໜ້ອຍດຽວ. ໃນທາງກົງກັນຂ້າມ, ເຈົ້າໄດ້ກາຍມາເປັນຄົນທີ່ບໍ່ມີຫຍັງດີທີ່ຕໍ່ຕ້ານພຣະເຈົ້າ. ສິ່ງນັ້ນບໍ່ໄດ້ເຮັດໃຫ້ເຈົ້າເປັນສັດຮ້າຍທີ່ເຖິງກັບຕໍ່າຕ້ອຍກວ່າໝາບໍ? ໃນບັນດາສັດຕ່າງໆ, ມີຫຍັງທີ່ມຸ່ງຮ້າຍກວ່າເຈົ້າບໍ?

ສິດຍາພິບານ ແລະ ຜູ້ອາວຸໂສເຫຼົ່ານັ້ນທີ່ຢືນຢູ່ເທິງທຳມາດສູງ ໂດຍສັ່ງເສີມຄົນອື່ນ ແມ່ນຄູ່ປໍລະປັກຂອງພຣະເຈົ້າ ແລະ ພັນທະມິດຂອງຊາຕານ; ພວກເຈົ້າທີ່ບໍ່ໄດ້ຢືນຢູ່ເທິງທຳມາດສູງແລ້ວສັ່ງສອນຄົນອື່ນຍິ່ງຈະບໍ່ເປັນຄູ່ປໍລະປັກຂອງພຣະເຈົ້າຫຼາຍກວ່ານັ້ນບໍ? ເຈົ້າບໍ່ໄດ້ຮ່ວມມືກັບຊາຕານຫຼາຍກວ່າພວກເຂົາບໍ? ຄົນທີ່ບໍ່ເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າກໍ່ບໍ່ຮູ້ຈັກວິທີການເຮັດຕາມຄວາມປະສົງຂອງພຣະເຈົ້າ. ແນ່ນອນ, ມັນບໍ່ສາມາດເປັນໄປໄດ້ທີ່ຄົນທີ່ເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະອົງຈະບໍ່ຮູ້ຈັກວິທີການເຮັດຕາມຄວາມປະສົງຂອງພຣະເຈົ້າ. ພາລະກິດຂອງພຣະເຈົ້າບໍ່ເຄີຍຜິດພາດຈັກເທື່ອ; ກົງກັນຂ້າມ ມັນຄືການສະແຫວງຫາຂອງມະນຸດທີ່ມີຂໍ້ບົກຜ່ອງ. ຄົນຕໍ່າຊາມເຫຼົ່ານັ້ນທີ່ຕັ້ງໃຈຕໍ່ຕ້ານພຣະເຈົ້າບໍ່ໄດ້ເຖິງກັບຊົ່ວຮ້າຍ ແລະ ເປັນອັນຕະລາຍຫຼາຍກວ່າສິດຍາພິບານ ແລະ ຜູ້ອາວຸໂສເຫຼົ່ານັ້ນບໍ? ຫຼາຍຄົນເປັນຄົນທີ່ຕໍ່ຕ້ານພຣະເຈົ້າ, ແຕ່ໃນບັນດາພວກເຂົາແມ່ນຍັງມີຫຼາຍລັກສະນະແຕກຕ່າງກັນທີ່ພວກເຂົາຕໍ່ຕ້ານພຣະເຈົ້າ. ຍ້ອນມີຜູ້ເຊື່ອທຸກຮູບແບບ, ສະນັ້ນ ມັນກໍ່ມີຜູ້ທີ່ຕໍ່ຕ້ານພຣະເຈົ້າທຸກຮູບແບບ, ແຕ່ລະແບບກໍ່ບໍ່ຄືກັນ. ບໍ່ມີແມ່ນແຕ່ຄົນດຽວທີ່ລົ້ມເຫຼວໃນການຮັບຮູ້ຈຸດປະສົງໃນພາລະກິດຂອງພຣະເຈົ້າຢ່າງຊັດເຈນຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ບໍ່ວ່າມະນຸດອາດຕໍ່ຕ້ານພຣະເຈົ້າແນວໃດກໍ່ຕາມໃນອະດີດ, ເມື່ອມະນຸດມາເຂົ້າໃຈຈຸດປະສົງໃນພາລະກິດຂອງພຣະເຈົ້າ ແລະ ອຸທິດຄວາມພະຍາຍາມຂອງເຂົາເພື່ອເຮັດໃຫ້ພຣະເຈົ້າພໍໃຈ, ພຣະເຈົ້າກໍ່ລຶບລ້າງຄວາມຜິດບາບທັງໝົດທີ່ຜ່ານມາຂອງເຂົາ. ຕາບໃດທີ່ມະນຸດສະແຫວງຫາຄວາມຈິງ ແລະ ປະຕິບັດຄວາມຈິງ, ພຣະເຈົ້າຈະບໍ່ຈື່ສິ່ງທີ່ເຂົາໄດ້ເຮັດ. ຍິ່ງໄປກວ່ານັ້ນ, ມັນຢູ່ບົນພື້ນຖານການປະຕິບັດ

ຄວາມຈິງຂອງມະນຸດທີ່ພຣະເຈົ້າພິສູດເຂົາ. ນີ້ຄືຄວາມຊອບທຳຂອງພຣະເຈົ້າ. ກ່ອນທີ່ມະນຸດໄດ້ເຫັນພຣະເຈົ້າ ຫຼື ປະສົບກັບພາລະກິດຂອງພຣະອົງ, ບໍ່ວ່າມະນຸດຈະເຮັດແນວໃດກໍ່ຕາມຕໍ່ພຣະເຈົ້າ, ພຣະອົງກໍ່ບໍ່ຈື່ມັນ. ເຖິງຢ່າງໃດກໍ່ຕາມ, ຫຼັງຈາກທີ່ມະນຸດໄດ້ເຫັນພຣະເຈົ້າ ແລະ ປະສົບກັບພາລະກິດຂອງພຣະອົງ, ການກະທຳ ແລະ ການປະພຶດທັງໝົດຂອງມະນຸດກໍ່ຖືກພຣະເຈົ້າບັນທຶກໄວ້ໃນ "ຈົດໝາຍເຫດ", ຍ້ອນມະນຸດໄດ້ເຫັນພຣະເຈົ້າ ແລະ ມີຊີວິດທ່າມກາງພາລະກິດຂອງພຣະອົງ.

ເມື່ອມະນຸດໄດ້ເຫັນສິ່ງທີ່ພຣະເຈົ້າມີ ແລະ ເປັນແທ້ໆ, ເມື່ອເຂົາໄດ້ເຫັນເຖິງອຳນາດສູງສຸດຂອງພຣະອົງ ແລະ ເມື່ອເຂົາໄດ້ມາຮູ້ຈັກພາລະກິດຂອງພຣະເຈົ້າຢ່າງແທ້ຈິງ ແລະ ຍິ່ງໄປກວ່ານັ້ນ ເມື່ອອຸປະນິໄສເດີມຂອງມະນຸດມີການປ່ຽນແປງ, ແລ້ວມະນຸດກໍ່ຈະປະຖິ້ມອຸປະນິໄສກະບົດຂອງເຂົາທີ່ຕໍ່ຕ້ານພຣະເຈົ້າອອກຢ່າງສົມບູນ. ມັນສາມາດເວົ້າໄດ້ວ່າ ທຸກຄົນໄດ້ຕໍ່ຕ້ານພຣະເຈົ້າໃນບາງຄັ້ງ ແລະທຸກຄົນໄດ້ກະບົດຕໍ່ພຣະເຈົ້າໃນບາງຄັ້ງ. ເຖິງຢ່າງໃດກໍ່ຕາມ, ຖ້າເຈົ້າເຕັມໃຈເຊື່ອຟັງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ຈາກຈຸດນີ້ ເຈົ້າເຮັດໃຫ້ພຣະເຈົ້າພໍໃຈດ້ວຍຄວາມຈິງຮັກພັກດີຂອງເຈົ້າ, ປະຕິບັດຄວາມຈິງທີ່ເຈົ້າຄວນປະຕິບັດ, ປະຕິບັດໜ້າທີ່ຂອງເຈົ້າດັ່ງທີ່ເຈົ້າຄວນເຮັດ ແລະ ຮັກສາກົດລະບຽບທີ່ເຈົ້າຄວນຮັກສາ, ແລ້ວເຈົ້າກໍ່ເປັນຄົນທີ່ເຕັມໃຈປະຖິ້ມຄວາມກະບົດຂອງເຈົ້າເພື່ອເຮັດໃຫ້ພຣະເຈົ້າພໍໃຈ ແລະ ຄົນທີ່ຖືກພຣະເຈົ້າເຮັດໃຫ້ສົມບູນ. ຖ້າເຈົ້າປະຕິເສດຢ່າງດື້ດ້ານທີ່ຈະເຫັນຄວາມຜິດພາດຂອງເຈົ້າ ແລະ ບໍ່ມີເຈດຕະນາທີ່ຈະກັບໃຈດ້ວຍຕົນເອງ, ຖ້າເຈົ້າຍັງຢືນຢັນໃນຄວາມປະພຶດທີ່ກະບົດຂອງເຈົ້າໂດຍບໍ່ມີເຈດຕະນາທີ່ຈະຮ່ວມມືກັບພຣະເຈົ້າ ແລະ ເຮັດໃຫ້ພຣະອົງພໍໃຈແມ່ນແຕ່ໜ້ອຍດຽວ, ແລ້ວຄົນທີ່ດື້ດຶງ ແລະ ບໍ່ສາມາດແກ້ໄຂໄດ້ແບບເຈົ້າກໍ່ຈະຖືກລົງໂທດຢ່າງແນ່ນອນ ແລະເປັນຄົນທີ່ບໍ່ຖືກພຣະເຈົ້າເຮັດໃຫ້ສົມບູນຈັກເທື່ອຢ່າງແນ່ນອນ. ເມື່ອເປັນແບບນີ້, ເຈົ້າກໍ່ເປັນສັດຕູຂອງພຣະເຈົ້າໃນມື້ນີ້ ແລະ ມື້ຕໍ່ໄປ ເຈົ້າກໍ່ຍັງຈະເປັນສັດຕູຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ເຈົ້າກໍ່ຍັງຈະເປັນສັດຕູຂອງພຣະເຈົ້າໃນມື້ຕໍ່ໄປອີກ; ເຈົ້າຈະເປັນຄູ່ປໍລະປັກຂອງພຣະເຈົ້າ ແລະ ສັດຕູຂອງພຣະເຈົ້າຕະຫຼອດໄປ. ໃນກໍລະນີນັ້ນ, ພຣະເຈົ້າຈະສາມາດປ່ອຍເຈົ້າໄປໄດ້ແນວໃດ? ມັນຄືທຳມະຊາດຂອງມະນຸດທີ່ຕໍ່ຕ້ານພຣະເຈົ້າ, ແຕ່ມະນຸດຕ້ອງບໍ່ຕັ້ງໃຈສະແຫວງຫາ "ຄວາມລັບ" ໃນການຕໍ່ຕ້ານພຣະເຈົ້າ ພຽງແຕ່ເພາະການປ່ຽນແປງທຳມະຊາດຂອງເຂົາເປັນໜ້າວຽກທີ່ເອົາຊະນະບໍ່ໄດ້. ຖ້ານັ້ນຄືຄວາມຈິງ, ແລ້ວມັນຈະດີກວ່າຖ້າເຈົ້າຍ່າງຈາກໄປກ່ອນທີ່ມັນຈະຊ້າເກີນໄປ, ເພື່ອບໍ່ໃຫ້ການຂ້ຽນຕີຂອງເຈົ້າໃນອະນາຄົດຮ້າຍແຮງຍິ່ງຂຶ້ນ ແລະ ເພື່ອບໍ່ໃຫ້ທຳມະຊາດທີ່ໂຫດຮ້າຍຂອງເຈົ້າລະເບີດອອກແລະ ບໍ່ສາມາດຄວບຄຸມໄດ້, ຈົນຮ່າງກາຍເນື້ອໜັງຂອງເຈົ້າຖືກປະຖິ້ມໂດຍພຣະເຈົ້າໃນທີ່ສຸດ. ເຈົ້າເຊື່ອໃນພຣະເຈົ້າເພື່ອຮັບພອນ; ແຕ່ຖ້າໃນທີ່ສຸດ ມີພຽງແຕ່ຄວາມໂຊກຮ້າຍທີ່ເກີດຂຶ້ນກັບເຈົ້າ, ນັ້ນຈະບໍ່ເປັນຄວາມອັບອາຍບໍ? ຂ້ອຍຂໍຮ້ອງເຈົ້າໃຫ້ເຈົ້າວາງແຜນອື່ນທີ່ດີກວ່າ. ແມ່ນຫຍັງກໍ່ຕາມທີ່ເຈົ້າສາມາດເຮັດໄດ້ດີກວ່າການເຊື່ອໃນພຣະເຈົ້າ: ແນ່ນອນ ມັນບໍ່ສາມາດເປັນໄປໄດ້ທີ່ຈະມີແຕ່ເສັ້ນທາງນີ້ເທົ່ານັ້ນ. ເຈົ້າຈະບໍ່ມີຊີວິດລອດບໍ ຖ້າເຈົ້າບໍ່ສະແຫວງຫາຄວາມຈິງ? ເປັນຫຍັງເຈົ້າຈຶ່ງຕ້ອງຂັດກັບພຣະເຈົ້າໃນລັກສະນະນີ້?

# ພຣະທຳຂອງພຣະຄຣິດໃນຂະນະ
# ທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ
# II

(ພະຈິກ 1992 ຫາ ມິຖຸນາ 1993)

# ພາລະກິດ ແລະ ທາງເຂົ້າ (1)

ຕັ້ງແຕ່ຜູ້ຄົນເລີ່ມເດີນຕາມເສັ້ນທາງທີ່ຖືກຕ້ອງແຫ່ງຄວາມເຊື່ອໃນພຣະເຈົ້າ ໄດ້ມີຫຼາຍສິ່ງທີ່ພວກເຂົາຍັງບໍ່ຊັດເຈນ. ພວກເຂົາຍັງຢູ່ໃນການສັບສົນຢ່າງສິ້ນເຊີງກ່ຽວກັບພາລະກິດຂອງພຣະເຈົ້າ ແລະ ກ່ຽວກັບພາລະກິດຫຼາຍຢ່າງທີ່ພວກເຂົາຄວນປະຕິບັດ. ສິ່ງນີ້ແມ່ນເນື່ອງຈາກວ່າ ໃນດ້ານໜຶ່ງ ຍ້ອນການຫັນທິດທາງໃນປະສົບການຂອງພວກເຂົາ ແລະ ຂີດຈຳກັດໃນຄວາມສາມາດທີ່ຈະຮັບເອົາຂອງພວກເຂົາ; ອີກດ້ານໜຶ່ງ ກໍຍ້ອນວ່າ ພາລະກິດຂອງພຣະເຈົ້າຍັງບໍ່ທັນໄດ້ນຳຜູ້ຄົນມາເຖິງຂັ້ນຕອນນີ້ເທື່ອ. ສະນັ້ນ, ທຸກຄົນຈຶ່ງຄຸມເຄືອກ່ຽວກັບບັນຫາສ່ວນໃຫຍ່ທາງດ້ານວິນຍານ. ບໍ່ແມ່ນແຕ່ວ່າເຈົ້າບໍ່ຊັດເຈນກ່ຽວກັບສິ່ງທີ່ເຈົ້າຄວນເຂົ້າສູ່ເທົ່ານັ້ນ; ເຈົ້າຍິ່ງບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າຫຼາຍຂຶ້ນ. ສິ່ງນີ້ເປັນຫຼາຍກວ່າບັນຫາຂໍ້ບົກຜ່ອງທີ່ຢູ່ພາຍໃນຕົວເຈົ້າແທ້ໆ: ມັນຄືຈຸດບົກຜ່ອງຢ່າງໃຫຍ່ທີ່ມັກເກີດຂຶ້ນຕໍ່ທຸກຄົນທີ່ຢູ່ໃນໂລກແຫ່ງສາສະໜາ. ໃນນີ້ມີຈຸດສຳຄັນສຳລັບຄຳຖາມທີ່ວ່າ ເປັນຫຍັງຜູ້ຄົນຈຶ່ງບໍ່ຮູ້ຈັກພຣະເຈົ້າ ແລະ ສະນັ້ນ ຄວາມບົກຜ່ອງນີ້ຈຶ່ງເປັນຄວາມບົກຜ່ອງທົ່ວໄປຂອງທຸກຄົນທີ່ສະແຫວງຫາພຣະອົງ. ບໍ່ມີແມ່ນແຕ່ຄົນດຽວເຄີຍຮູ້ຈັກພຣະເຈົ້າ ຫຼື ເຄີຍເຫັນໃບໜ້າທີ່ແທ້ຈິງຂອງພຣະອົງ. ມັນເປັນຍ້ອນສິ່ງນີ້ ພາລະກິດຂອງພຣະເຈົ້າຈຶ່ງຫຍຸ້ງຍາກສໍ່າກັບການເຄື່ອນຍ້າຍພູເຂົາ ຫຼື ລະບາຍນໍ້າທະເລ. ສະນັ້ນ ຫຼາຍຄົນໄດ້ເສຍສະຫຼະຊີວິດຂອງພວກເຂົາສຳລັບພາລະກິດຂອງພຣະເຈົ້າ; ສະນັ້ນ ຫຼາຍຄົນໄດ້ຖືກຂັບໄລ່ໜີເນື່ອງຈາກພາລະກິດຂອງພຣະອົງ; ສະນັ້ນ ຫຼາຍຄົນໄດ້ຖືກທໍລະມານຈົນຕາຍ ຍ້ອນເຫັນແກ່ພາລະກິດຂອງພຣະອົງ; ສະນັ້ນ ຫຼາຍຄົນຕາຍຢ່າງບໍ່ຍຸຕິທຳ ເຖິງແມ່ນຕາຂອງພວກເຂົາເຕັມໄປດ້ວຍນໍ້າຕາແຫ່ງຄວາມຮັກສຳລັບພຣະເຈົ້າ; ສະນັ້ນ ຫຼາຍຄົນໄດ້ພົບກັບການຂົ່ມເຫັງຢ່າງໂຫດຮ້າຍ ແລະ ໄຮ້ມະນຸດສະທຳ... ໂສກກະນາດຕະກຳເຫຼົ່ານີ້ເກີດຂຶ້ນບໍ່ແມ່ນຍ້ອນຜູ້ຄົນຂາດຄວາມຮູ້ກ່ຽວກັບພຣະເຈົ້າບໍ? ຄົນທີ່ບໍ່ຮູ້ຈັກພຣະເຈົ້າຈະມີໜ້າມາຢູ່ຕໍ່ໜ້າພຣະອົງໄດ້ແນວໃດ? ຄົນທີ່ເຊື່ອໃນພຣະເຈົ້າ ແຕ່ຂົ່ມເຫັງພຣະເຈົ້າຈະມີໜ້າມາຢູ່ຕໍ່ໜ້າພຣະອົງໄດ້ແນວໃດ? ສິ່ງເຫຼົ່ານີ້ບໍ່ແມ່ນແຕ່ຄວາມບົກຜ່ອງຂອງຄົນທີ່ຢູ່ພາຍໃນໂລກແຫ່ງສາສະໜາເທົ່ານັ້ນ, ແຕ່ກົງກັນຂ້າມ ພວກມັນເປັນເລື່ອງປົກກະຕິສຳລັບພວກເຈົ້າ ແລະ ພວກເຂົາ. ຄົນເຊື່ອໃນພຣະເຈົ້າໂດຍບໍ່ຮູ້ຈັກພຣະອົງ; ຍ້ອນເຫດຜົນນີ້ເຫດຜົນດຽວ ພວກເຂົາຈຶ່ງບໍ່ເຄົາລົບບູຊາພຣະເຈົ້າໃນຫົວໃຈຂອງພວກເຂົາ ແລະ ບໍ່ຢຳເກງພຣະອົງໃນຫົວໃຈຂອງພວກເຂົາ. ຍັງມີຄົນ ເຖິງກັບປະຕິບັດພາລະກິດທີ່ພວກເຂົາຈິນຕະນາການດ້ວຍຕົນເອງພາຍໃນກະແສນີ້ ແລະ ເລີ່ມປະຕິບັດພາລະກິດທີ່ຝາກຝັງໂດຍພຣະເຈົ້າຕາມຄວາມຮຽກຮ້ອງຕ້ອງການ ແລະ ຄວາມປາຖະໜາທີ່ເກີນຂອບເຂດຂອງພວກເຂົາເອງຢ່າງເປີດເຜີຍ ແລະ ດື້ດ້ານ. ຫຼາຍຄົນປະພຶດຕົນຢ່າງບ້າປ່ວງໂດຍບໍ່ເຄົາລົບຕໍ່ພຣະເຈົ້າເລີຍ ແຕ່ພາກັນປະຕິບັດຕາມຄວາມປະສົງຂອງຕົນເອງ. ຕົວຢ່າງເຫຼົ່ານີ້ບໍ່ແມ່ນການສຳແດງອອກທີ່ສົມບູນເຖິງຫົວໃຈທີ່ເຫັນແກ່ຕົວຂອງຜູ້ຄົນບໍ? ຕົວຢ່າງເຫຼົ່ານີ້ບໍ່ໄດ້ສະແດງເຖິງອົງປະກອບຂອງການຫຼອກລວງທີ່ເກີນຂອບເຂດທີ່ຢູ່ພາຍໃນຜູ້ຄົນບໍ? ແນ່ນອນຜູ້ຄົນອາດສະຫຼາດຫຼາຍທີ່ສຸດ, ແຕ່ພອນສະຫວັນຂອງພວກເຂົາຈະແທນທີ່ພາລະກິດຂອງພຣະເຈົ້າໄດ້

ແນວໃດ? ແນ່ນອນ ຜູ້ຄົນອາດໃສ່ໃຈກັບພາລະຂອງພຣະເຈົ້າ, ແຕ່ພວກເຂົາບໍ່ຄວນປະພຶດຢ່າງເຫັນແກ່ຕົວເກີນໄປ. ການກະທຳຂອງຜູ້ຄົນເປັນຄືກັບການກະທຳຂອງພຣະເຈົ້າບໍ? ໃຜກໍ່ຕາມສາມາດໝັ້ນໃຈໄດ້ຮ້ອຍເປີເຊັນບໍ? ການເປັນພະຍານໃຫ້ກັບພຣະເຈົ້າ, ການຮັບເອົາສະຫງ່າລາສີຂອງພຣະອົງ, ສິ່ງນີ້ແມ່ນພຣະເຈົ້າເປັນຜູ້ສ້າງຂໍ້ຍົກເວັ້ນ ແລະ ຍົກຜູ້ຄົນຂຶ້ນ; ພວກເຂົາຈະຄູ່ຄວນໄດ້ແນວໃດ? ພາລະກິດຂອງພຣະເຈົ້າພຽງແຕ່ຫາກໍ່ເລີ່ມຕົ້ນ ແລະ ພຣະທຳຂອງພຣະອົງພຽງແຕ່ຫາກໍ່ເລີ່ມຖືກກ່າວອອກ. ໃນຕອນນີ້, ຜູ້ຄົນຮູ້ສຶກດີກ່ຽວກັບຕົນເອງ, ແຕ່ນີ້ບໍ່ແມ່ນພຽງການສ້າງຄວາມອັບອາຍແທ້ບໍ? ພວກເຂົາເຂົ້າໃຈໜ້ອຍເກີນໄປ. ແມ່ນແຕ່ນັກທິດສະດີທີ່ມີພອນສະຫວັນທີ່ສຸດ, ນັກປາໄສທີ່ເວົ້າຢ່າງໂວຫານ, ກໍບໍ່ສາມາດອະທິບາຍເຖິງຄວາມອຸດົມສົມບູນຂອງພຣະເຈົ້າໄດ້, ສະນັ້ນ ພວກເຈົ້າຍິ່ງຈະບໍ່ສາມາດອະທິບາຍໄດ້ບໍ? ພວກບໍ່ຄວນກຳນົດຄຸນຄ່າຂອງຕົນເອງໃຫ້ສູງກວ່າສະຫວັນ, ແຕ່ກົງກັນຂ້າມພວກເຈົ້າຄວນເບິ່ງຕົນເອງຕໍ່າຕ້ອຍກວ່າຜູ້ຄົນທີ່ມີເຫດຜົນເຫຼົ່ານັ້ນທີ່ສະແຫວງຫາເພື່ອຮັກພຣະເຈົ້າ. ນີ້ແມ່ນເສັ້ນທາງທີ່ເຈົ້າຄວນເຂົ້າສູ່: ໃຫ້ເບິ່ງຕົນເອງຕ້ອຍຕໍ່າກວ່າຄົນອື່ນຫຼາຍ. ເປັນຫຍັງຈຶ່ງເຫັນວ່າຕົນເອງສູງສົ່ງ? ເປັນຫຍັງຈຶ່ງປະເມີນຄ່າຕົນເອງສູງແບບນັ້ນ? ໃນການເດີນທາງຢ່າງຍາວນານຂອງຊີວິດ, ເຈົ້າພຽງແຕ່ຍ່າງສອງສາມບາດກ້າວທຳອິດເທົ່ານັ້ນ. ສິ່ງທີ່ເຈົ້າເຫັນແມ່ນແຂນຂອງພຣະເຈົ້າເທົ່ານັ້ນ, ບໍ່ແມ່ນທັງໝົດຂອງພຣະເຈົ້າ. ມັນຈຳເປັນທີ່ຈະໃຫ້ເຈົ້າເຫັນເຖິງພາລະກິດຂອງພຣະເຈົ້າຫຼາຍຂຶ້ນ, ຄົ້ນພົບສິ່ງທີ່ເຈົ້າຄວນເຂົ້າສູ່ຫຼາຍຂຶ້ນ, ເພາະວ່າ ເຈົ້າໄດ້ປ່ຽນແປງໜ້ອຍເກີນໄປ.

ໃນການເຮັດໃຫ້ມະນຸດສົມບູນ ແລະ ປ່ຽນແປງອຸປະນິໄສຂອງເຂົາ, ພາລະກິດຂອງພຣະເຈົ້າບໍ່ເຄີຍເຊົາຈັກເທື່ອ ເພາະພວກເຂົາຂາດເຂີນໃນຫຼາຍດ້ານ ແລະ ພວກເຂົາຕໍ່າກວ່າມາດຕະຖານທີ່ພຣະອົງກຳນົດໄວ້ຫຼາຍ. ສະນັ້ນ ສາມາດເວົ້າໄດ້ວ່າ ໃນສາຍຕາຂອງພຣະເຈົ້າ ເຈົ້າຈະເປັນທາລົກເກີດໃໝ່ຕະລອດໄປ, ມີອົງປະກອບເລັກນ້ອຍທີ່ເຮັດໃຫ້ພຣະອົງພໍໃຈ, ເພາະວ່າ ເຈົ້າບໍ່ໄດ້ເປັນຫຍັງ ນອກຈາກສິ່ງທີ່ມີຊີວິດໃນກຳມືຂອງພຣະເຈົ້າ. ຖ້າບຸກຄົນໜຶ່ງຕົກສູ່ຄວາມພາກພູມໃຈໃນຕົນເອງ, ພວກເຂົາຈະບໍ່ຖືກພຣະເຈົ້າກຽດຊັງບໍ? ການເວົ້າວ່າເຈົ້າສາມາດເຮັດໃຫ້ພຣະເຈົ້າພໍໃຈໃນປັດຈຸບັນກໍຄືການເວົ້າຈາກທັດສະນະທີ່ຈຳກັດຂອງຝ່າຍເນື້ອໜັງຂອງເຈົ້າ; ຖ້າຕ້ອງຕໍ່ສູ້ກັບພຣະເຈົ້າແທ້ໆ, ເຈົ້າຈະພ່າຍແພ້ໃນສະໜາມຕະລອດໄປ. ເນື້ອໜັງຂອງມະນຸດບໍ່ເຄີຍຮັບຮູ້ວ່າໄດ້ຮັບໄຊຊະນະຈັກເທື່ອ. ມີແຕ່ຜ່ານທາງພາລະກິດຂອງພຣະວິນຍານບໍລິສຸດເທົ່ານັ້ນ ມະນຸດຈຶ່ງຈະສາມາດຖືກໄຖ່ບາບໄດ້. ໃນຄວາມເປັນຈິງ, ໃນບັນດາສັບພະສິ່ງທັງປວງທີ່ຢູ່ໃນການເນລະມິດສ້າງຂອງພຣະເຈົ້າ ມະນຸດຄືສິ່ງທີ່ຕໍ່າຕ້ອຍທີ່ສຸດ. ເຖິງແມ່ນວ່າເຂົາເປັນເຈົ້ານາຍຂອງສິ່ງທັງປວງ, ມະນຸດຄືສິ່ງດຽວໃນບັນດາສິ່ງທັງປວງທີ່ຕົກຢູ່ໃນກົນອຸບາຍຂອງຊາຕານ, ສິ່ງດຽວທີ່ຕົກເປັນເຫຍື່ອຂອງການເສື່ອມຊາມຂອງມັນໂດຍບໍ່ສິ້ນສຸດ. ມະນຸດບໍ່ເຄີຍປົກຄອງຕົນເອງຈັກເທື່ອ. ມະນຸດສ່ວນໃຫຍ່ດຳລົງຊີວິດຢູ່ໃນບ່ອນທີ່ສົກກະປົກຂອງຊາຕານ ແລະ ທົນທຸກກັບການເຍາະເຍີ້ຍຂອງມັນ; ມັນເຍີ້ຍພວກເຂົາໃນລັກສະນະນີ້ ແລະ ຈົນພວກເຂົາເຄິ່ງຢູ່ເຄິ່ງຕາຍ, ອົດກັ້ນກັບຊີວິດຂຶ້ນໆລົງໆ, ຄວາມລຳບາກໃນໂລກມະນຸດ. ຫຼັງຈາກຢອກຫຼິ້ນກັບພວກເຂົາ, ຊາຕານກໍເຮັດໃຫ້ໂຊກຊະຕາຂອງພວກເຂົາສິ້ນສຸດ. ດ້ວຍເຫດນັ້ນ ຜູ້ຄົນຈຶ່ງພະເຊີນກັບຊີວິດທັງໝົດ

ຂອງພວກເຂົາໃນຄວາມມືນເມົາຢ່າງສັບສົນ, ບໍ່ເຄີຍໄດ້ຮັບສິ່ງດີໆທີ່ພຣະເຈົ້າໄດ້ຈັດກຽມໄວ້ໃຫ້ກັບພວກເຂົາ, ແຕ່ກົງກັນຂ້າມ ພວກເຂົາຖືກຊາຕານທຳລາຍ ແລະ ປ່ອຍໃຫ້ເປັນເສດສ່ວນ. ໃນປັດຈຸບັນພວກເຂົາໄດ້ອ່ອນເພຍຫຼາຍ ແລະ ບໍ່ມີຊີວິດຊີວາຈົນພວກເຂົາບໍ່ມີຈິດໃຈທີ່ຈະສັງເກດພາລະກິດຂອງພຣະເຈົ້າເລີຍ. ຖ້າຜູ້ຄົນບໍ່ມີຈິດໃຈທີ່ຈະສັງເກດພາລະກິດຂອງພຣະເຈົ້າ, ປະສົບການຂອງພວກເຂົາກໍຈະຕົກຢູ່ກັບຄວາມແຕກຫັກ ແລະ ບໍ່ສົມບູນຕະຫຼອດໄປ ແລະ ທາງເຂົ້າຂອງພວກເຂົາກໍຈະເປັນບ່ອນວ່າງເປົ່າຕະຫຼອດໄປ. ເປັນເວລາຫຼາຍພັນປີຕັ້ງແຕ່ພຣະເຈົ້າສະເດັດມາເທິງໂລກ, ມີມະນຸດຈຳນວນຫຼວງຫຼາຍທີ່ມີອຸດົມຄະຕິສູງສົ່ງໄດ້ຖືກພຣະເຈົ້າໃຊ້ເພື່ອປະຕິບັດພາລະກິດສຳລັບພຣະເຈົ້າໃນເວລາຫຼາຍປີ; ແຕ່ຄົນທີ່ຮູ້ຈັກພາລະກິດຂອງພຣະອົງແມ່ນມີໜ້ອຍຫຼາຍ ຈົນເກືອບວ່າຈະບໍ່ມີຢູ່ເລີຍ. ຍ້ອນເຫດຜົນນີ້, ຜູ້ຄົນຈຳນວນນັບບໍ່ຖ້ວນໄດ້ຮັບເອົາບົດບາດໃນການຕໍ່ຕ້ານພຣະເຈົ້າ ແລະ ໃນເວລາດຽວກັນພວກເຂົາກໍປະຕິບັດພາລະກິດເພື່ອພຣະອົງ, ເພາະວ່າ ແທນທີ່ຈະປະຕິບັດພາລະກິດຂອງພຣະອົງ, ພວກເຂົາພັດປະຕິບັດພາລະກິດຂອງມະນຸດໃນຕຳແໜ່ງທີ່ພຣະເຈົ້າມອບໃຫ້. ສິ່ງນີ້ຈະສາມາດຖືກເອີ້ນວ່າພາລະກິດໄດ້ບໍ? ພວກເຂົາຈະສາມາດເຂົ້າສູ່ໄດ້ແນວໃດ? ມະນຸດໄດ້ເອົາພຣະຄຸນຂອງພຣະເຈົ້າ ແລະ ຝັງມັນໄວ້. ຍ້ອນສິ່ງນີ້, ໃນຫຼາຍຍຸກທີ່ຜ່ານມາ ຜູ້ຄົນທີ່ປະຕິບັດພາລະກິດຂອງພຣະອົງຈຶ່ງມີທາງເຂົ້າສູ່ພຽງແຕ່ໜ້ອຍດຽວ. ພວກເຂົາບໍ່ເວົ້າເຖິງການຮູ້ຈັກພາລະກິດຂອງພຣະເຈົ້າເລີຍ, ເພາະວ່າ ພວກເຂົາເຂົ້າໃຈກ່ຽວກັບສະຕິປັນຍາຂອງພຣະເຈົ້າໜ້ອຍເກີນໄປ. ສາມາດເວົ້າໄດ້ວ່າເຖິງແມ່ນມີຫຼາຍຄົນທີ່ຮັບໃຊ້ພຣະເຈົ້າ, ພວກເຂົາກໍບໍ່ສາມາດເຫັນວ່າພຣະອົງສູງສົ່ງສໍ່າໃດ ແລະ ນີ້ຄືເຫດຜົນທີ່ວ່າເປັນຫຍັງທຸກຄົນຈຶ່ງໄດ້ແຕ່ງຕັ້ງຕົນເອງເປັນພຣະເຈົ້າເພື່ອໃຫ້ຄົນອື່ນນະມັດສະການ.

ເປັນເວລາຫຼາຍປີ ທີ່ພຣະເຈົ້າໄດ້ລີ້ຊ້ອນຢູ່ພາຍໃນການເນລະມິດສ້າງ; ພຣະອົງໄດ້ສັງເກດລະດູໃບໄມ້ປົ່ງ ແລະ ລະດູໃບໄມ້ຫຼົ່ນຫຼາຍຄັ້ງຈາກການປົກຄຸມຂອງໝອກ; ພຣະອົງໄດ້ຫຼຽວລົງມາຈາກສະຫວັນຊັ້ນສາມເປັນເວລາຫຼາຍມື້ ແລະ ຫຼາຍຄືນ; ພຣະອົງໄດ້ຍ່າງທ່າມກາງມະນຸດເປັນເວລາຫຼາຍເດືອນ ແລະ ຫຼາຍປີ. ພຣະອົງໄດ້ນັ່ງຢູ່ເໜືອມະນຸດທັງປວງ ລໍຖ້າຢ່າງງຽບໆຕະຫຼອດລະດູໜາວທີ່ຜ່ານໄປຫຼາຍຄັ້ງ. ບໍ່ມີແມ່ນແຕ່ຄັ້ງດຽວທີ່ພຣະອົງສະແດງຕົນເອງຢ່າງເປີດເຜີຍໃຫ້ກັບທຸກຄົນເຫັນ ຫຼື ສົ່ງສຽງແມ່ນແຕ່ຄັ້ງດຽວ ແລະ ພຣະອົງຈາກໄປໂດຍບໍ່ມີສັນຍານ ແລະ ກັບຄືນມາຢ່າງງຽບໆເທົ່ານັ້ນ. ຜູ້ໃດສາມາດຮູ້ຈັກໃບໜ້າທີ່ແທ້ຈິງຂອງພຣະອົງແດ່? ພຣະອົງບໍ່ເຄີຍເວົ້າກັບມະນຸດຈັກເທື່ອ, ບໍ່ເຄີຍປາກົດຕົວຕໍ່ມະນຸດຈັກເທື່ອ. ມັນງ່າຍສໍ່າໃດທີ່ຈະໃຫ້ຜູ້ຄົນປະຕິບັດພາລະກິດທີ່ຖືກມອບໝາຍໂດຍພຣະເຈົ້າ? ໜ້ອຍຄັ້ງທີ່ພວກເຂົາຈະເຂົ້າໃຈວ່າການຮູ້ຈັກພຣະເຈົ້າເປັນສິ່ງທີ່ຫຍຸ້ງຍາກທີ່ສຸດໃນບັນດາສິ່ງຕ່າງໆ. ໃນປັດຈຸບັນ ພຣະເຈົ້າໄດ້ກ່າວຕໍ່ມະນຸດ, ແຕ່ມະນຸດບໍ່ເຄີຍຮູ້ຈັກພຣະອົງ ຍ້ອນວ່າ ທາງເຂົ້າສູ່ຊີວິດຂອງເຂົາແມ່ນຈຳກັດ ແລະ ຕື້ນເກີນໄປ. ເມື່ອເບິ່ງຈາກທັດສະນະຂອງພຣະອົງ, ຜູ້ຄົນບໍ່ສົມຄວນທີ່ຈະປາກົດຕົວຕໍ່ໜ້າພຣະເຈົ້າເລີຍ. ພວກເຂົາມີຄວາມເຂົ້າໃຈເລັກນ້ອຍກ່ຽວກັບພຣະເຈົ້າ ແລະ ຫ່າງເຫີນຈາກພຣະອົງຫຼາຍເກີນໄປ. ຍິ່ງໄປກວ່ານັ້ນ, ຫົວໃຈທີ່ພວກເຂົາມີທີ່ເຊື່ອໃນພຣະເຈົ້າກໍສັບຊ້ອນເກີນໄປ ແລະ ພວກເຂົາບໍ່ມີພາບຫຼັກຂອງພຣະເຈົ້າຢູ່ໃນຫົວໃຈສ່ວນເລິກທີ່ສຸດຂອງພວກເຂົາເລີຍ.

ຜົນຕາມມາກໍຄື ຄວາມພະຍາຍາມຢ່າງເຈັບປວດຂອງພຣະເຈົ້າ ແລະ ພາລະກິດຂອງພຣະອົງທີ່ເປັນເໝືອນດັ່ງທອງຄຳທີ່ຝັງໄວ້ຢູ່ໃນດິນຊາຍ ແມ່ນບໍ່ສາມາດສ່ອງແສງສະຫວ່າງແວບວັບໄດ້. ສຳລັບພຣະເຈົ້າແລ້ວ, ລະດັບຄວາມສາມາດ, ແຮງຈູງໃຈ ແລະ ມຸມມອງຂອງຄົນເຫຼົ່ານີ້ແມ່ນເປັນຕາກຽດຊັງທີ່ສຸດ. ຍ້ອນຂາດຄວາມສາມາດໃນການຮັບຂອງພວກເຂົາ, ຄວາມບໍ່ຮູ້ສຶກຈົນເຖິງຄວາມເສີຍເມີຍ, ຊຸດໂຊມ ແລະ ເສື່ອມໂຊມ, ເປັນທາດຮັບໃຊ້ຫຼາຍເກີນໄປ, ອ່ອນແອ ແລະ ບໍ່ມີກຳລັງໃຈ, ພວກເຂົາຕ້ອງໄດ້ຖືກຈູງຄືກັບຈູງງົວ ແລະ ມ້າ. ແຕ່ສຳລັບທາງເຂົ້າຝ່າຍວິນຍານຂອງພວກເຂົາ ຫຼື ທາງເຂົ້າໃນພາລະກິດຂອງພຣະເຈົ້າ, ພວກເຂົາບໍ່ເອົາໃຈໃສ່ແມ່ນແຕ່ໜ້ອຍດຽວ, ບໍ່ມີຄວາມຕັ້ງໃຈທີ່ຈະທົນທຸກເພື່ອເຫັນແກ່ຄວາມຈິງແມ່ນແຕ່ໜ້ອຍດຽວ. ມັນບໍ່ງ່າຍສຳລັບຄົນປະເພດນີ້ທີ່ຈະຖືກເຮັດໃຫ້ບໍລິບູນໂດຍພຣະເຈົ້າ. ສະນັ້ນ ມັນຈຶ່ງເປັນເລື່ອງສຳຄັນທີ່ເຈົ້າຕ້ອງເລີ່ມຈັດທາງເຂົ້າຂອງເຈົ້າຈາກມຸມນີ້, ເພື່ອວ່າຜ່ານພາລະກິດຂອງພວກເຈົ້າ ແລະ ທາງເຂົ້າຂອງພວກເຈົ້າ, ພວກເຈົ້າຈະເລີ່ມມາຮູ້ຈັກພາລະກິດຂອງພຣະເຈົ້າ.

# ພາລະກິດ ແລະ ທາງເຂົ້າ (2)

ພາລະກິດ ແລະ ທາງເຂົ້າຂອງພວກເຈົ້າແມ່ນບໍ່ດີປານໃດ; ມະນຸດບໍ່ໃຫ້ຄວາມສຳຄັນກັບວິທີການປະຕິບັດພາລະກິດ ແລະ ຍິ່ງບໍ່ຕັ້ງໃຈສົນໃຈກ່ຽວກັບທາງເຂົ້າແຫ່ງຊີວິດ. ມະນຸດບໍ່ຖືວ່າສິ່ງເຫຼົ່ານີ້ເປັນບົດຮຽນທີ່ພວກເຂົາຄວນເຂົ້າສູ່; ສະນັ້ນ ໃນປະສົບການພວກເຈົ້າ ຕາມຄວາມຈິງແລ້ວສິ່ງທີ່ມະນຸດເຫັນແມ່ນພາບລວງຕາທີ່ວ່າງເປົ່າ. ບໍ່ມີຫຍັງຫຼາຍທີ່ຮຽກຮ້ອງຈາກພວກເຈົ້າເທົ່າທີ່ກ່ຽວຂ້ອງກັບພາລະກິດ, ແຕ່ເມື່ອມະນຸດຈະຖືກພຣະເຈົ້າເຮັດໃຫ້ສົມບູນ, ພວກເຈົ້າກໍຄວນຮຽນຮູ້ບົດຮຽນຂອງພວກເຈົ້າທີ່ກ່ຽວກັບການປະຕິບັດພາລະກິດເພື່ອພຣະເຈົ້າ ເພື່ອວ່າພວກເຈົ້າອາດສອດຄ່ອງກັບຄວາມປະສົງຂອງພຣະເຈົ້າໃນອີກບໍ່ດົນ. ທົ່ວຍຸກຕ່າງໆ, ຄົນທີ່ປະຕິບັດພາລະກິດແມ່ນຖືກເອີ້ນວ່າຜູ້ປະຕິບັດພາລະກິດ ຫຼື ອັກຄະສາວົກ ເຊິ່ງໝາຍເຖິງຄົນຈຳນວນໜ້ອຍທີ່ພຣະເຈົ້າໃຊ້. ເຖິງຢ່າງໃດກໍຕາມ, ພາລະກິດທີ່ເຮົາກ່າວເຖິງໃນປັດຈຸບັນບໍ່ໄດ້ໝາຍເຖິງຜູ້ປະຕິບັດພາລະກິດ ຫຼື ອັກຄະສາວົກເຫຼົ່ານັ້ນເທົ່ານັ້ນ, ແຕ່ກົງກັນຂ້າມແມ່ນແນໃສ່ທຸກຄົນທີ່ຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ບາງເທື່ອມີຫຼາຍຄົນທີ່ສົນໃຈເລັກນ້ອຍໃນສິ່ງນີ້, ແຕ່ເພື່ອເຫັນແກ່ທາງເຂົ້າ ມັນຈະດີທີ່ສຸດທີ່ຈະສົນທະນາເຖິງຄວາມຈິງກ່ຽວກັບເລື່ອງນີ້.

ເມື່ອເວົ້າເຖິງພາລະກິດ, ມະນຸດເຊື່ອວ່າພາລະກິດແມ່ນຕ້ອງແລ່ນໄປມາເພື່ອພຣະເຈົ້າ, ເທດສະໜາໃນທຸກບ່ອນ ແລະ ໃຊ້ເວລາເພື່ອຜົນປະໂຫຍດຂອງພຣະອົງ. ເຖິງແມ່ນຄວາມເຊື່ອນີ້ຖືກຕ້ອງ, ມັນກໍເປັນພຽງດ້ານດຽວ; ສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດບໍ່ແມ່ນການເດີນທາງໄປໆມາໆເພື່ອພຣະອົງເທົ່ານັ້ນ; ນອກເໜືອຈາກນີ້, ພາລະກິດນີ້ແມ່ນກ່ຽວຂ້ອງກັບພັນທະກິດ ແລະ ການຕອບສະໜອງພາຍໃນຈິດວິນຍານ. ອ້າຍເອື້ອຍນ້ອງຫຼາຍຄົນບໍ່ເຄີຍຄິດເຖິງການປະຕິບັດພາລະກິດເພື່ອພຣະເຈົ້າແມ່ນແຕ່ຫຼັງຈາກມີປະສົບການຫຼາຍປີ, ຍ້ອນວ່າ ພາລະກິດທີ່ມະນຸດຄິດຂຶ້ນແມ່ນບໍ່ສອດຄ່ອງກັບສິ່ງທີ່ພຣະເຈົ້າຮຽກຮ້ອງ. ສະນັ້ນ ມະນຸດຈຶ່ງບໍ່ສົນໃຈສິ່ງໃດໃນເລື່ອງພາລະກິດ ແລະ ນີ້ກໍຄືເຫດຜົນຢ່າງແທ້ຈິງທີ່ວ່າ ເປັນຫຍັງທາງເຂົ້າຂອງມະນຸດຈຶ່ງຍັງຢູ່ໃນດ້ານດຽວມາຕະຫຼອດ. ພວກເຈົ້າທຸກຄົນຄວນເລີ່ມຕົ້ນເຂົ້າສູ່ໂດຍການປະຕິບັດພາລະກິດເພື່ອພຣະເຈົ້າ ເພື່ອວ່າ ພວກເຈົ້າຈະມີປະສົບການທີ່ດີຂຶ້ນໃນທຸກດ້ານ. ນີ້ແມ່ນສິ່ງທີ່ພວກເຈົ້າຄວນເຂົ້າສູ່. ພາລະກິດບໍ່ໄດ້ໝາຍເຖິງການແລ່ນໄປມາເພື່ອພຣະເຈົ້າ; ແຕ່ມັນໝາຍຄວາມວ່າ ຊີວິດຂອງມະນຸດ ແລະ ສິ່ງທີ່ມະນຸດດຳລົງຊີວິດຕາມແມ່ນເພື່ອມອບຄວາມສຸກໃຫ້ແກ່ພຣະເຈົ້າ ຫຼື ບໍ່. ພາລະກິດໝາຍເຖິງການທີ່ມະນຸດໃຊ້ຄວາມຊື່ສັດທີ່ພວກເຂົາມີຕໍ່ພຣະເຈົ້າ ແລະ ຄວາມຮູ້ທີ່ພວກເຂົາມີກ່ຽວກັບພຣະເຈົ້າເພື່ອເປັນພະຍານໃຫ້ແກ່ພຣະເຈົ້າ ແລະ ຄອຍຮັບໃຊ້ມະນຸດ. ນີ້ແມ່ນຄວາມຮັບຜິດຊອບຂອງມະນຸດ ແລະ ນີ້ແມ່ນສິ່ງທີ່ມະນຸດຄວນເຂົ້າໃຈ. ເວົ້າອີກແບບໜຶ່ງກໍຄືທາງເຂົ້າຂອງພວກເຈົ້າແມ່ນພາລະກິດຂອງພວກເຈົ້າ ແລະ ພວກເຈົ້າກຳລັງສະແຫວງຫາເພື່ອເຂົ້າສູ່ລະຫວ່າງເສັ້ນທາງການປະຕິບັດພາລະກິດເພື່ອພຣະເຈົ້າ. ການມີປະສົບການກັບພາລະກິດຂອງພຣະເຈົ້າບໍ່ໄດ້ໝາຍຄວາມວ່າ ເຈົ້າຮູ້ຈັກວິທີການກິນ ແລະ ດື່ມພຣະທຳຂອງພຣະອົງເທົ່ານັ້ນ; ທີ່ສຳຄັນໄປກວ່າ

ນັ້ນກໍຄື ພວກເຈົ້າຕ້ອງຮູ້ວິທີການເປັນພະຍານກ່ຽວກັບພຣະເຈົ້າ, ສາມາດຮັບໃຊ້ພຣະເຈົ້າ, ສາມາດຄອຍຮັບໃຊ້ ແລະ ຕອບສະໜອງໃຫ້ກັບມະນຸດ. ນີ້ແມ່ນພາລະກິດ ແລະ ຍັງເປັນທາງເຂົ້າຂອງພວກເຈົ້າ; ນີ້ແມ່ນສິ່ງທີ່ທຸກຄົນຄວນເຮັດໃຫ້ສຳເລັດ. ມີຫຼາຍຄົນທີ່ພຽງແຕ່ໃສ່ໃຈກັບການເດີນທາງໄປມາເພື່ອພຣະເຈົ້າ ແລະ ເທດສະໜາໃນທຸກບ່ອນ, ແຕ່ພາກັນເບິ່ງຂ້າມປະສົບການສ່ວນຕົວຂອງພວກເຂົາ ແລະ ເບິ່ງຂ້າມທາງເຂົ້າສູ່ຊີວິດຝ່າຍວິນຍານຂອງພວກເຂົາ. ນີ້ແມ່ນສິ່ງທີ່ນຳພາໃຫ້ຄົນທີ່ຮັບໃຊ້ພຣະເຈົ້າກາຍເປັນຄົນຕໍ່ຕ້ານພຣະເຈົ້າ. ຄົນເລົ່ານີ້ ເຊິ່ງເປັນຄົນທີ່ຮັບໃຊ້ພຣະເຈົ້າ ແລະ ຄອຍຮັບໃຊ້ມະນຸດເປັນເວລາຫຼາຍປີ ພຽງແຕ່ຖືວ່າການປະຕິບັດພາລະກິດ ແລະ ການເທດສະໜາເປັນທາງເຂົ້າ ແລະ ບໍ່ມີໃຜຖືວ່າ ປະສົບການຝ່າຍວິນຍານຂອງພວກເຂົາເອງເປັນທາງເຂົ້າທີ່ສຳຄັນ. ກົງກັນຂ້າມ, ພວກເຂົາໃຊ້ແສງສະຫວ່າງແຫ່ງພາລະກິດທີ່ສືບມາຈາກພາລະກິດຂອງພຣະວິນຍານບໍລິສຸດເພື່ອເປັນປະໂຫຍດໃນການສັ່ງສອນຄົນອື່ນ. ເມື່ອເວລາເທດສະໜາ, ພວກເຂົາແມ່ນແບກຫາບພາລະຢ່າງຫຼວງຫຼາຍ ແລະ ຮັບເອົາພາລະກິດຂອງພຣະວິນຍານບໍລິສຸດ ແລະ ດ້ວຍສິ່ງນີ້ ພວກເຂົາຈຶ່ງໄດ້ປ່ອຍສຽງຂອງພຣະວິນຍານບໍລິສຸດ. ໃນເວລານັ້ນ ຄົນທີ່ປະຕິບັດພາລະກິດກໍເຕັມໄປດ້ວຍຄວາມເພິ່ງພໍໃຈ ຄືກັບວ່າພາລະກິດຂອງພຣະວິນຍານບໍລິສຸດເປັນປະສົບການຝ່າຍວິນຍານຂອງພວກເຂົາເອງ; ພວກເຂົາຮູ້ສຶກວ່າພຣະທຳທຸກຂໍ້ທີ່ພວກເຂົາກ່າວໃນເວລານັ້ນແມ່ນຕົວຕົນຂອງພວກເຂົາເອງ ແຕ່ອີກຄັ້ງໜຶ່ງກໍຄືກັບວ່າປະສົບການຂອງພວກເຂົາແມ່ນບໍ່ຊັດເຈນດັ່ງທີ່ພວກເຂົາໄດ້ອະທິບາຍ. ນອກຈາກນັ້ນ ກ່ອນທີ່ຈະເວົ້າ ພວກເຂົາແມ່ນບໍ່ມີວີ່ແວວວ່າຈະເວົ້າຫຍັງເລີຍ, ແຕ່ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດໃນພວກເຂົາ, ຄຳເວົ້າຂອງພວກເຂົາແມ່ນຫລັ່ງໄຫຼ່ອອກມາຢ່າງບໍ່ຮູ້ຈົບ. ຫຼັງຈາກທີ່ເຈົ້າໄດ້ເທດສະໜາໄປໃນລັກສະນະນັ້ນເທື່ອໜຶ່ງ, ເຈົ້າຈະຮູ້ສຶກວ່າວຸດທິພາວະຕົວຈິງຂອງເຈົ້າບໍ່ໄດ້ຕໍ່າເທົ່າທີ່ເຈົ້າເຊື່ອ ແລະ ໃນສະຖານະການທີ່ພຣະວິນຍານບໍລິສຸດໄດ້ປະຕິບັດພາລະກິດໃນຕົວເຈົ້າເປັນເວລາສອງສາມຄັ້ງ, ແລ້ວເຈົ້າກໍຈະກຳນົດວ່າ ເຈົ້າໄດ້ມີວຸດທິພາວະແລ້ວ ແລະ ເຊື່ອຢ່າງຜິດໆວ່າພາລະກິດຂອງພຣະວິນຍານບໍລິສຸດແມ່ນທາງເຂົ້າ ແລະ ການເປັນຢູ່ຂອງເຈົ້າເອງ. ເມື່ອເຈົ້າມີປະສົບການນີ້ຢ່າງຕໍ່ເນື່ອງ, ເຈົ້າກໍຈະເລີ່ມບໍ່ເຄັ່ງຄັດກ່ຽວກັບທາງເຂົ້າຂອງເຈົ້າເອງ, ແລ້ວເຈົ້າກໍຈະກ້າວເຂົ້າໄປສູ່ຄວາມຂີ້ຄ້ານໂດຍບໍ່ຮູ້ຕົວ ແລະ ເຊົາໃຫ້ຄວາມສຳຄັນຂອງທາງເຂົ້າຂອງເຈົ້າເລີຍ. ດັ່ງນັ້ນ ເມື່ອເຈົ້າຄອຍຮັບໃຊ້ຄົນອື່ນ, ເຈົ້າຕ້ອງແຍກແຍະຢ່າງຊັດເຈນລະຫວ່າງວຸດທິພາວະຂອງເຈົ້າ ແລະ ພາລະກິດຂອງພຣະວິນຍານບໍລິສຸດ. ສິ່ງນີ້ຈະເຮັດໃຫ້ທາງເຂົ້າຂອງເຈົ້າສະດວກຂຶ້ນ ແລະ ເຮັດໃຫ້ປະສົບການຂອງເຈົ້າມີຜົນປະໂຫຍດຫຼາຍຂຶ້ນ. ເມື່ອມະນຸດຖືພາລະກິດຂອງພຣະວິນຍານບໍລິສຸດເປັນດັ່ງປະສົບການຂອງພວກເຂົາເອງ, ສິ່ງນີ້ຈະກາຍມາເປັນຈຸດເລີ່ມຕົ້ນແຫ່ງການເສື່ອມໂຊມຂອງມະນຸດ. ນີ້ຄືເຫດຜົນທີ່ເຮົາບອກວ່າ ໜ້າທີ່ຫຍັງກໍຕາມທີ່ພວກເຈົ້າປະຕິບັດ, ພວກເຈົ້າຄວນຖືວ່າທາງເຂົ້າຂອງພວກເຈົ້າເປັນບົດຮຽນທີ່ສຳຄັນ.

ຄົນໃດໜຶ່ງປະຕິບັດພາລະກິດເພື່ອພໍໃຈຄວາມປະສົງຂອງພຣະເຈົ້າ, ເພື່ອນຳຜູ້ຄົນທີ່ປະຕິບັດຕາມໃຈຂອງພຣະເຈົ້າມາຢູ່ຕໍ່ໜ້າພຣະອົງ, ເພື່ອນຳມະນຸດມາຫາພຣະເຈົ້າ ແລະ ເພື່ອແນະນຳພາລະກິດຂອງພຣະວິນຍານບໍລິສຸດ ແລະ ຄຳແນະນຳຂອງພຣະເຈົ້າໃຫ້ກັບມະນຸດ, ແລ້ວສຸດທ້າຍກໍເຮັດໃຫ້ໝາກຜົນ

ຂອງພາລະກິດຂອງພຣະເຈົ້າສົມບູນ. ຍ້ອນເຫດຜົນນີ້, ມັນຈຳເປັນທີ່ສຸດທີ່ພວກເຈົ້າຈະເຂົ້າໃຈແກ່ນແທ້ຂອງພາລະກິດຢ່າງຄົບຖ້ວນ. ດັ່ງທີ່ຄົນໜຶ່ງຖືກພຣະເຈົ້າໃຊ້, ມະນຸດທຸກຄົນກໍສົມຄວນຄ່າໃນການປະຕິບັດພາລະກິດເພື່ອພຣະເຈົ້າ ນັ້ນກໍຄື ທຸກຄົນມີໂອກາດທີ່ຈະຖືກພຣະວິນຍານບໍລິສຸດໃຊ້. ເຖິງຢ່າງໃດກໍຕາມ ມີປະເດັນໜຶ່ງທີ່ພວກເຈົ້າຕ້ອງເຂົ້າໃຈ: ເມື່ອມະນຸດປະຕິບັດພາລະກິດທີ່ຖືກມອບໝາຍໂດຍພຣະເຈົ້າ, ມະນຸດມີໂອກາດທີ່ຈະຖືກພຣະເຈົ້າໃຊ້ ແຕ່ສິ່ງທີ່ມະນຸດເວົ້າ ແລະ ຮູ້ຈັກບໍ່ແມ່ນວຸດທິພາວະຂອງມະນຸດທັງໝົດ. ພວກເຈົ້າພຽງແຕ່ສາມາດມາຮູ້ຈັກຄວາມບົກຜ່ອງຂອງພວກເຈົ້າໃນລະຫວ່າງການປະຕິບັດພາລະກິດຂອງພວກເຈົ້າ ແລະ ຮັບເອົາແສງສະຫວ່າງທີ່ຍິ່ງໃຫຍ່ກວ່າຈາກພຣະວິນຍານບໍລິສຸດເທົ່ານັ້ນ, ໃນທາງນີ້ ເຈົ້າຈະສາມາດຮັບທາງເຂົ້າທີ່ດີຂຶ້ນໃນພາລະກິດຂອງພວກເຈົ້າ. ຖ້າມະນຸດເຫັນວ່າການນຳພາຂອງພຣະເຈົ້າເປັນທາງເຂົ້າຂອງມະນຸດເອງ ແລະ ເປັນສິ່ງທີ່ມີໂດຍກຳເນີດພາຍໃນພວກເຂົາ, ແລ້ວມັນກໍເປັນໄປບໍ່ໄດ້ທີ່ຈະໃຫ້ວຸດທິພາວະຂອງມະນຸດເຕີບໃຫຍ່. ແສງສະຫວ່າງທີ່ພຣະວິນຍານບໍລິສຸດປະຕິບັດໃນມະນຸດແທນທີ່ເມື່ອພວກເຂົາຢູ່ໃນສະພາວະປົກກະຕິ; ໃນເວລານັ້ນ, ມະນຸດເຂົ້າໃຈຜິດຢູ່ເລື້ອຍໆວ່າແສງສະຫວ່າງທີ່ພວກເຂົາໄດ້ຮັບແມ່ນວຸດທິພາວະໃນຄວາມເປັນຈິງຂອງພວກເຂົາເອງ, ຍ້ອນທາງທີ່ພຣະວິນຍານບໍລິສຸດສ່ອງແສງສະຫວ່າງແມ່ນທຳມະດາທີ່ສຸດ ແລະ ພຣະອົງກໍນຳໃຊ້ສິ່ງທີ່ມະນຸດມີໂດຍກຳເນີດໃຫ້ເກີດຜົນປະໂຫຍດ. ເມື່ອມະນຸດປະຕິບັດພາລະກິດ ແລະ ເວົ້າ ຫຼື ເມື່ອພວກເຂົາອະທິຖານຫຼື ເຮັດການອຸທິດຝ່າຍວິນຍານຂອງພວກເຂົາ, ຄວາມຈິງຈະຍິ່ງຊັດເຈນຂຶ້ນກັບພວກເຂົາທັນທີ. ເຖິງຢ່າງໃດກໍຕາມ ໃນຄວາມເປັນຈິງ ສິ່ງທີ່ມະນຸດເຫັນກໍເປັນພຽງແສງສະຫວ່າງຈາກພຣະວິນຍານບໍລິສຸດເທົ່ານັ້ນ (ໂດຍທຳມະຊາດແລ້ວ ແສງສະຫວ່າງນີ້ແມ່ນກ່ຽວຂ້ອງກັບການຮ່ວມມືຂອງມະນຸດ) ແລະ ບໍ່ໄດ້ແທນວຸດທິພາວະທີ່ແທ້ຈິງຂອງມະນຸດ. ຫຼັງຈາກຊ່ວງເວລາແຫ່ງປະສົບການທີ່ມະນຸດຜະເຊີນກັບຄວາມຫຍຸ້ງຍາກ ແລະ ການທົດລອງບາງຢ່າງ, ວຸດທິພາວະທີ່ແທ້ຈິງຂອງຂອງມະນຸດກໍຈະຖືກເຮັດໃຫ້ຈະແຈ້ງພາຍໃຕ້ສະຖານະການດັ່ງກ່າວ. ຫຼັງຈາກນັ້ນ ມະນຸດຈຶ່ງຈະໄດ້ຄົ້ນພົບວ່າ ວຸດທິພາວະຂອງຕົນເອງບໍ່ໄດ້ຍິ່ງໃຫຍ່ ແລະຄວາມເຫັນແກ່ຕົວ, ການຄຳນຶງເຖິງແຕ່ຕົນເອງ ແລະ ຄວາມໂລບຂອງມະນຸດຈະປະກົດຂຶ້ນທັງໝົດ. ພຽງແຕ່ຫຼັງຈາກໄດ້ຮັບປະສົບການດັ່ງກ່າວສອງສາມຄັ້ງແບບນີ້ ຫຼາຍຄົນທີ່ໄດ້ຕື່ນຂຶ້ນພາຍໃນວິນຍານຂອງພວກເຂົາຈະເຂົ້າໃຈວ່າ ສິ່ງທີ່ພວກເຂົາໄດ້ປະສົບໃນອະດີດບໍ່ແມ່ນຄວາມເປັນຈິງຂອງພວກເຂົາເອງ, ແຕ່ເປັນແສງເຍືອງທາງຊົ່ວຄາວຈາກພຣະວິນຍານບໍລິສຸດ ແລະ ມະນຸດພຽງແຕ່ໄດ້ຮັບແສງສະຫວ່າງນັ້ນ. ເມື່ອພຣະວິນຍານບໍລິສຸດສ່ອງແສງສະຫວ່າງໃສ່ມະນຸດເພື່ອໃຫ້ເຂົ້າໃຈຄວາມຈິງ, ສ່ວນໃຫຍ່ແມ່ນໃນລັກສະນະທີ່ຊັດເຈນ ແລະ ແຕກຕ່າງໂດຍບໍ່ອະທິບາຍວ່າ ສິ່ງຕ່າງໆເກີດຂຶ້ນໄດ້ແນວໃດ ຫຼື ພວກມັນກຳລັງຈະໄປໃສ. ນັ້ນກໍຄື ແທນທີ່ຈະລວມເອົາຄວາມຫຍຸ້ງຍາກຂອງມະນຸດເຂົ້າໃນການເປີດເຜີຍນີ້ ພຣະອົງເປີດເຜີຍຄວາມຈິງໂດຍກົງ. ເມື່ອມະນຸດພົບກັບຄວາມຫຍຸ້ງຍາກໃນທາງເຂົ້າ ແລະ ແລ້ວກໍຮັບເອົາແສງສະຫວ່າງຂອງພຣະວິນຍານບໍລິສຸດ, ສິ່ງນີ້ກໍກາຍມາເປັນປະສົບການຕົວຈິງຂອງມະນຸດ. ຕົວຢ່າງ: ເອື້ອຍນ້ອງທີ່ບໍ່ໄດ້ແຕ່ງດອງກ່າວລະຫວ່າງການສົນທະນາວ່າ: “ພວກຂ້ານ້ອຍບໍ່ສະແຫວງຫາສະຫງ່າລາສີ ແລະ ຄວາມຮັ່ງມີ

ຫຼື ອິດສາຄວາມສຸກແຫ່ງຄວາມຮັກລະຫວ່າງສາມີ ແລະ ພັນລະຍາ; ພວກຂ້ານ້ອຍພຽງແຕ່ສະແຫວງຫາເພື່ອອຸທິດຫົວໃຈທີ່ບໍລິສຸດ ແລະ ໃຈດຽວໃຫ້ກັບພຣະເຈົ້າ". ລາວສືບຕໍ່ເວົ້າວ່າ: "ຫຼັງຈາກທີ່ຜູ້ຄົນແຕ່ງດອງ, ມີຫຼາຍສິ່ງທີ່ລົບກວນພວກເຂົາ ແລະ ຫົວໃຈແຫ່ງຄວາມຮັກຂອງພວກເຂົາທີ່ມີຕໍ່ພຣະເຈົ້າກໍບໍ່ເປັນຈິງອີກຕໍ່ໄປ. ຫົວໃຈຂອງພວກເຂົາໝົກມຸ້ນຢູ່ກັບຄອບຄົວຂອງພວກເຂົາ ແລະ ຜົວເມຍຂອງພວກເຂົາຢູ່ສະເໝີ ແລະ ສະນັ້ນ ໂລກພາຍໃນຂອງພວກເຂົາຈຶ່ງຍິ່ງສັບສົນຂຶ້ນຫຼາຍກວ່າເກົ່າ...". ເມື່ອລາວເວົ້າ, ມັນຄືກັບວ່າຄຳເວົ້າທີ່ລາວເວົ້າອອກມານັ້ນ ເປັນສິ່ງທີ່ລາວກຳລັງຄິດຢູ່ໃນໃຈຂອງລາວ; ຄຳເວົ້າຂອງລາວກຶກກ້ອງ ແລະ ມີພະລັງ, ຄືກັບວ່າລາວເວົ້າອອກມາຈາກສ່ວນເລິກໃນຫົວໃຈຂອງລາວ ແລະ ຄືກັບວ່າ ຄວາມປາຖະໜາອັນແຮງກ້າຂອງລາວແມ່ນການອຸທິດຕົນທັງໝົດໃຫ້ກັບພຣະເຈົ້າ ແລະ ຫວັງວ່າອ້າຍເອື້ອຍນ້ອງທີ່ເປັນຄືກັບລາວຈະມີຄວາມຕັ້ງໃຈແບບດຽວກັນ. ມັນສາມາດເວົ້າໄດ້ວ່າ ຄວາມຕັ້ງໃຈຂອງເຈົ້າ ແລະ ຄວາມຮູ້ສຶກທີ່ຖືກສຳຜັດໄດ້ໃນຊ່ວງເວລານີ້ແມ່ນມາຈາກພາລະກິດຂອງພຣະວິນຍານບໍລິສຸດທັງສິ້ນ. ເມື່ອວິທີການແຫ່ງພາລະກິດຂອງພຣະເຈົ້າປ່ຽນແປງ, ເຈົ້າກໍເຕີບໃຫຍ່ຂຶ້ນເປັນສອງສາມປີ; ເຈົ້າເຫັນວ່າເພື່ອນຮ່ວມຫ້ອງຂອງເຈົ້າ ແລະ ໝູ່ເພື່ອນທຸກຄົນທີ່ອາຍຸສ່ຳກັບເຈົ້າມີສາມີ ຫຼື ເຈົ້າໄດ້ຍິນວ່າ ຫຼັງຈາກທີ່ຄົນນັ້ນຄົນນີ້ແຕ່ງດອງ, ຄູ່ສົມລົດຂອງລາວກໍພາລາວໄປຢູ່ໃນເມືອງ ແລະ ລາວໄດ້ເຮັດວຽກຢູ່ທີ່ນັ້ນ. ເມື່ອເຈົ້າເຫັນລາວ, ເຈົ້າກໍຈະເລີ່ມຮູ້ສຶກອິດສາ, ເມື່ອເຫັນວ່າ ລາວມີສະເໜ່ ແລະ ສະຫງ່າງາມຕັ້ງແຕ່ຫົວຮອດຕີນ ແລະ ວິທີທີ່ລາວມີລັດສະນິຍົມຂອງຄົນໃນເມືອງ ເມື່ອລາວເວົ້າກັບເຈົ້າ ໂດຍບໍ່ມີຮ່ອງຮອຍຂອງຄວາມບ້ານນອກກ່ຽວກັບລາວ. ສິ່ງນີ້ບັນດານຄວາມຮູ້ສຶກໃນຕົວເຈົ້າ. ເມື່ອໄດ້ໃຊ້ເວລາເພື່ອພຣະເຈົ້າຕະຫຼອດມາ, ເຈົ້າບໍ່ມີຄອບຄົວ ຫຼື ອາຊີບ ແລະ ເຈົ້າໄດ້ອົດທົນກັບການຮັບມືຕໍ່ບັນຫາຫຼາຍຢ່າງ; ດົນນານມາແລ້ວ ເຈົ້າໄດ້ເຂົ້າສູ່ໄວກາງຄົນ ແລະ ຄວາມເປັນໄວໜຸ່ມຂອງເຈົ້າກໍຫາຍໄປຢ່າງງຽບໆ ຄືກັນກັບວ່າເຈົ້າຢູ່ໃນຄວາມຝັນ. ບັດນີ້, ເຈົ້າໄດ້ເດີນທາງມາເຖິງປັດຈຸບັນ, ແຕ່ເຈົ້າກໍບໍ່ຮູ້ວ່າຈະຕັ້ງຖິ່ນຖານຢູ່ໃສ. ໃນຂະນະນີ້ ເຈົ້າຢູ່ໃນສາຍລົມແຫ່ງຄວາມຄິດ ຄືກັນກັບວ່າເຈົ້າໝົດປັນຍາ. ຢູ່ຄົນດຽວ ແລະ ບໍ່ສາມາດນອນຫຼັບໄດ້ເປັນປົກກະຕິ, ພົບວ່າມັນຍາກທີ່ຈະນອນຫຼັບໝົດຄືນ, ກ່ອນທີ່ເຈົ້າຈະຮູ້ເຖິງສິ່ງນັ້ນ ເຈົ້າກໍເລີ່ມຄິດເຖິງຄວາມຕັ້ງໃຈຂອງເຈົ້າ ແລະ ຄຳສາບານຂອງເຈົ້າທີ່ມີຕໍ່ພຣະເຈົ້າ ແລະ ເປັນຫຍັງ ເຖິງຢ່າງນັ້ນ ເຈົ້າກໍຍັງຕົກລົງສູ່ສະພາວະທີ່ໂສກເສົ້າເສຍໃຈດັ່ງກ່າວ? ນໍ້າຕາກໍໄດ້ຫລັ່ງໄຫຼອອກມາຢ່າງຢ່າງງຽບໆໂດຍບໍ່ຮູ້ສຶກຕົວ ແລະ ເຈົ້າກໍເຈັບປວດຢ່າງແຮງ. ເຈົ້າມາຢູ່ຕໍ່ໜ້າພຣະເຈົ້າເພື່ອອະທິຖານ ແລະ ເຈົ້າຄິດເຖິງຄວາມສະໜິດ ແລະ ຄວາມໃກ້ຊິດທີ່ບໍ່ສາມາດແຍກອອກຈາກກັນໄດ້ ໃນລະຫວ່າງມື້ທີ່ເຈົ້າມີຄວາມສຸກກັບພຣະເຈົ້າ. ແຕ່ລະສາກປະກົດຂຶ້ນຕໍ່ໜ້າຂອງເຈົ້າ ແລະ ຄຳສາບານທີ່ເຈົ້າໄດ້ໃຫ້ໄວ້ໃນມື້ນັ້ນກໍດັງຢູ່ໃນຫູຂອງເຈົ້າອີກຄັ້ງ: "ພຣະເຈົ້າບໍ່ແມ່ນມິດສະຫາຍຜູ້ດຽວຂອງຂ້ານ້ອຍບໍ?" ໃນເວລານັ້ນ ເຈົ້າກໍຮ້ອງໄຫ້ສະອຶກສະອື້ນວ່າ "ພຣະເຈົ້າເອີຍ! ພຣະເຈົ້າຜູ້ເປັນທີ່ຮັກເອີຍ! ຂ້ານ້ອຍໄດ້ມອບຫົວໃຈຂອງຂ້ານ້ອຍໃຫ້ກັບພຣະອົງທັງສິ້ນແລ້ວ. ຂ້ານ້ອຍປາຖະໜາທີ່ຈະເປັນຄົນໃຫ້ຄຳໝັ້ນສັນຍາຕໍ່ພຣະອົງຕະຫຼອດໄປ ແລະ ຂ້ານ້ອຍຈະຮັກພຣະອົງໂດຍບໍ່ປ່ຽນແປງຕະຫຼອດຊີວິດທັງໝົດຂອງຂ້ານ້ອຍ...". ມີແຕ່ເມື່ອເຈົ້າ

ພະຍາຍາມໃນຄວາມທົນທຸກທີ່ຮຸນແຮງແບບນັ້ນ ເຈົ້າຈຶ່ງຈະຮູ້ສຶກຢ່າງແທ້ຈິງວ່າ ພຣະເຈົ້າເປັນຕາຮັກຫຼາຍສໍ່າໃດ ແລະ ມີແຕ່ເມື່ອນັ້ນ ເຈົ້າຈຶ່ງເຂົ້າໃຈຢ່າງຊັດເຈນວ່າ: ຂ້ານ້ອຍມອບທັງໝົດຂອງຂ້ານ້ອຍຕໍ່ພຣະເຈົ້າດົນນານມາແລ້ວ. ຫຼັງຈາກໄດ້ຮັບຜົນກະທົບດັ່ງກ່າວ, ເຈົ້າຈຶ່ງຍິ່ງມີປະສົບການໃນເລື່ອງນີ້ຫຼາຍຂຶ້ນ ແລະ ເຫັນວ່າພາລະກິດຂອງພຣະວິນຍານບໍລິສຸດໃນເວລານັ້ນບໍ່ແມ່ນບາງຢ່າງທີ່ມະນຸດຄອບຄອງ. ໃນປະສົບການຂອງເຈົ້າຫຼັງຈຸດນີ້, ເຈົ້າກໍບໍ່ໄດ້ຖືກຈໍາກັດໃນທາງເຂົ້ານີ້ອີກຕໍ່ໄປ; ມັນເປັນຄືກັບວ່າຮອຍບາດແຜຂອງເຈົ້າໄດ້ສິ່ງຜົນປະໂຫຍດຕໍ່ທາງເຂົ້າຂອງເຈົ້າຢ່າງຫຼວງຫຼາຍ. ເມື່ອໃດກໍຕາມທີ່ເຈົ້າພະເຊີນກັບສະຖານະການແບບນີ້, ເຈົ້າຈະຈື່ຈໍານໍ້າຕາທີ່ເຈົ້າຫລັ່ງໄຫຼມື້ນັ້ນທັນທີ, ຄືກັບວ່າເຈົ້າກໍາລັງຢູ່ຮ່ວມກັບພຣະເຈົ້າອີກຄັ້ງຫຼັງຈາກການແຍກຫ່າງກັນ ແລະ ຢູ່ໃນຄວາມຢ້ານກົວຢ່າງຕໍ່ເນື່ອງວ່າຄວາມສໍາພັນຂອງເຈົ້າກັບພຣະເຈົ້າຈະໂຫດຮ້າຍ ແລະ ມີອາລົມທາງຄວາມຜູກພັນຂຶ້ນຫຼາຍກວ່າເດີມ (ຄວາມສໍາພັນປົກກະຕິ) ລະຫວ່າງເຈົ້າ ແລະ ພຣະເຈົ້າຖືກທໍາລາຍ. ນີ້ແມ່ນພາລະກິດຂອງເຈົ້າ ແລະທາງເຂົ້າຂອງເຈົ້າ. ສະນັ້ນ ເມື່ອພວກເຈົ້າໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ, ໃນເວລາດຽວກັນພວກເຈົ້າກໍຄວນໃຫ້ຄວາມສໍາຄັນແກ່ທາງເຂົ້າຂອງພວກເຈົ້າຂຶ້ນຕື່ມ, ເບິ່ງວ່າພາລະກິດຂອງພຣະວິນຍານບໍລິສຸດແມ່ນຫຍັງແທ້ ແລະ ແມ່ນຫຍັງຄືທາງເຂົ້າຂອງພວກເຈົ້າ ພ້ອມທັງເອົາພາລະກິດຂອງພຣະວິນຍານບໍລິສຸດເຂົ້າໃນທາງເຂົ້າຂອງພວກເຈົ້າ ເພື່ອວ່າພວກເຈົ້າອາດຖືກພຣະວິນຍານບໍລິສຸດເຮັດໃຫ້ສົມບູນໃນຫຼາຍທາງເພີ່ມຂຶ້ນ ແລະ ເພື່ອວ່າແກ່ນແທ້ຂອງພຣະວິນຍານບໍລິສຸດຈະເກີດຂຶ້ນໃນຕົວພວກເຈົ້າ. ໃນລະຫວ່າງເສັ້ນທາງແຫ່ງປະສົບການຂອງພວກເຈົ້າກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ, ພວກເຈົ້າຈະມາຮູ້ຈັກພຣະວິນຍານບໍລິສຸດ ພ້ອມທັງຕົນເອງ ແລະ ຍິ່ງໄປກວ່ານັ້ນໃນທ່າມກາງຂອງຄົນທີ່ຮູ້ວ່າຊ່ວງເວລາແຫ່ງຄວາມທົນທຸກທໍລະມານມີຫຼາຍປານໃດ, ພວກເຈົ້າຈະພັດທະນາຄວາມສໍາພັນປົກກະຕິກັບພຣະເຈົ້າ ແລະ ຄວາມສໍາພັນລະຫວ່າງພວກເຈົ້າ ແລະ ພຣະເຈົ້າກໍເລີ່ມໃກ້ຊິດກັນຫຼາຍຂຶ້ນໃນແຕ່ລະມື້. ຫຼັງຈາກທີ່ຖືກຣານ ແລະ ຫຼໍ່ຫຼອມຈົນນັບບໍ່ຖ້ວນ, ພວກເຈົ້າຈຶ່ງໄດ້ສ້າງຄວາມຮັກທີ່ແທ້ຈິງສໍາລັບພຣະເຈົ້າ. ນັ້ນຄືເຫດຜົນທີ່ວ່າເປັນຫຍັງພວກເຈົ້າຕ້ອງເຂົ້າໃຈຄວາມທົນທຸກ, ການຂ້ຽນຕີ ແລະ ຄວາມລໍາບາກຍາກແຄ້ນບໍ່ແມ່ນສິ່ງທີ່ເຮັດໃຫ້ຫວາດຫວັ່ນ; ສິ່ງທີ່ເປັນຕາຢ້ານກໍຄືການມີພຽງແຕ່ພາລະກິດຂອງພຣະວິນຍານບໍລິສຸດ ແຕ່ບໍ່ແມ່ນທາງເຂົ້າຂອງພວກເຈົ້າ. ເມື່ອມື້ນັ້ນມາເຖິງ ເຊິ່ງເປັນມື້ທີ່ພາລະກິດຂອງພຣະເຈົ້າສໍາເລັດລົງ, ພວກເຈົ້າກໍຈະປະຕິບັດພາລະກິດໂດຍສູນເປົ່າ; ເຖິງແມ່ນພວກເຈົ້າພະເຊີນກັບພາລະກິດຂອງພຣະເຈົ້າ, ພວກເຈົ້າກໍຈະບໍ່ໄດ້ມາຮູ້ຈັກພຣະວິນຍານບໍລິສຸດ ຫຼື ມີທາງເຂົ້າຂອງພວກເຈົ້າເອງ. ແສງສະຫວ່າງທີ່ພຣະວິນຍານບໍລິສຸດເຮັດພາລະກິດໃນມະນຸດ ບໍ່ແມ່ນເພື່ອສະໜັບສະໜູນຄວາມຫຼົງໄຫຼຂອງມະນຸດ, ແຕ່ເພື່ອເປີດທົນທາງສໍາລັບທາງເຂົ້າຂອງມະນຸດ ພ້ອມທັງເຮັດໃຫ້ມະນຸດມາຮູ້ຈັກພຣະວິນຍານບໍລິສຸດ ແລະ ຈາກສິ່ງນັ້ນ ມະນຸດກໍຈະເກີດມີຫົວໃຈແຫ່ງຄວາມເຄົາລົບນັບຖື ແລະ ຄວາມຮັກຕໍ່ພຣະເຈົ້າ.

# ພາລະກິດ ແລະ ທາງເຂົ້າ (3)

ພຣະເຈົ້າໄດ້ມອບໝາຍຫຼາຍຢ່າງໃຫ້ກັບມະນຸດ ແລະ ຍັງໄດ້ຈັດການທາງເຂົ້າຂອງພວກເຂົາໃນຫຼາຍວິທີຈົນນັບບໍ່ຖ້ວນ. ແຕ່ຍ້ອນຄວາມສາມາດຂອງຜູ້ຄົນຕໍ່າຫຼາຍ, ພຣະທຳຫຼາຍຂໍ້ຂອງພຣະເຈົ້າຈຶ່ງບໍ່ສາມາດປັກຮາກຖານໄດ້. ມີຫຼາກຫຼາຍເຫດຜົນສຳລັບຄວາມສາມາດຕໍ່າເຊັ່ນນີ້ ເຊັ່ນ: ຄວາມເສື່ອມຊາມຂອງຄວາມຄິດ ແລະ ສິນທຳຂອງມະນຸດ ແລະ ການຂາດການສັ່ງສອນທີ່ຖືກຕ້ອງ; ຄວາມເຊື່ອງົມງວາຍແບບສັກດີນາທີ່ໄດ້ເຂົ້າຍຶດຫົວໃຈຂອງມະນຸດຢ່າງຮ້າຍແຮງ; ວິທີຊີວິດທີ່ຊົ່ວຊ້າ ແລະ ເສື່ອມໂຊມທີ່ໄດ້ຝັງຄວາມຊົ່ວຫຼາຍຢ່າງຢູ່ໃນມຸມເລິກທີ່ສຸດຂອງຫົວໃຈມະນຸດ; ຄວາມເຂົ້າໃຈໜັງສືກ່ຽວກັບວັດທະນະທຳແບບຜິວເຜີນ ເຊິ່ງຄົນເກືອບເກົ້າສິບແປດເປີເຊັນແມ່ນຂາດການສຶກສາໃນເລື່ອງໜັງສືວັດທະນະທຳ ແລະ ຍິ່ງໄປກວ່ານັ້ນ ມີຄົນຈຳນວນໜ້ອຍຫຼາຍທີ່ໄດ້ຮັບການສຶກສາກ່ຽວກັບວັດທະນະທຳໃນລະດັບສູງ. ສະນັ້ນ ໂດຍພື້ນຖານແລ້ວຜູ້ຄົນແມ່ນບໍ່ຮູ້ຈັກວ່າ ພຣະເຈົ້າ ຫຼື ພຣະວິນຍານໝາຍເຖິງຫຍັງ, ພວກເຂົາມີພຽງພາບລັກສະນະທີ່ເລື່ອນລອຍ ແລະ ບໍ່ຊັດເຈນກ່ຽວກັບພຣະເຈົ້າເຊິ່ງໄດ້ຮັບມາຈາກຄວາມເຊື່ອງົມງວາຍແບບສັກດີນາ. ອິດທິພົນທີ່ເປັນອັນຕະລາຍຫຼາຍພັນປີຂອງ "ວິນຍານແຫ່ງຊາດນິຍົມຢ່າງສູງ" ທີ່ໄດ້ຝັງເລິກເຂົ້າໃນຫົວໃຈມະນຸດ ພ້ອມກັບຄວາມຄິດແບບສັກດີນາທີ່ຜູກມັດ ແລະ ລ່າມໂສ້ຜູ້ຄົນໂດຍບໍ່ມີອິດສະຫຼະແມ່ນແຕ່ໜ້ອຍດຽວ, ບໍ່ມີຄວາມປະສົງທີ່ຈະສະແຫວງຫາ ຫຼື ຄວາມພາກພຽນ, ບໍ່ມີຄວາມປາຖະໜາທີ່ຈະກ້າວໜ້າ, ແຕ່ກົງກັນຂ້າມ ຍັງເປັນຄົນຂີ້ຄ້ານ ແລະ ຖອຍຫຼັງ, ຍຶດຕິດໃນຄວາມຄິດທາງດ້ານຂ້າທາດ ແລະ ອື່ນໆອີກ, ປັດໄຈແທ້ຈິງເຫຼົ່ານີ້ໄດ້ຖ່າຍທອດແບບພິມຂອງຄວາມສົກກະປົກ ແລະ ຂີ້ຮ້າຍທີ່ລຶບບໍ່ອອກ ໃຫ້ກັບທັດສະນະຕາມອຸດົມຄະຕິ, ອຸດົມການ, ສິນທຳ ແລະ ອຸປະນິໄສຂອງມະນຸດ. ມັນເບິ່ງຄືກັບວ່າ ມະນຸດກຳລັງດຳລົງຊີວິດຢູ່ໃນໂລກຂອງຜູ້ກໍ່ການຮ້າຍທີ່ມືດມົວ ເຊິ່ງບໍ່ມີຜູ້ໃດທ່າມກາງພວກເຂົາສະແຫວງຫາຢູ່ເໜືອມັນ ແລະ ບໍ່ມີຜູ້ໃດທ່າມກາງພວກເຂົາຄິດຍ້າຍໄປຢູ່ໂລກອຸດົມຄະຕິ; ກົງກັນຂ້າມ ພວກເຂົາພໍໃຈກັບໂຊກຊະຕາໃນຊີວິດຂອງພວກເຂົາ, ໃຊ້ເວລາແຕ່ລະມື້ຂອງພວກເຂົາເພື່ອເກີດ ແລະ ລ້ຽງລູກຫຼານ, ດີ້ນຣົນ, ໃຊ້ເຫື່ອແຮງ, ໝົກມຸ້ນຢູ່ກັບວຽກເຮືອນຂອງພວກເຂົາ, ຝັນຢາກມີຄອບຄົວທີ່ສະບາຍ ແລະ ມີຄວາມສຸກ, ຄວາມຮັກໃນຊີວິດຄູ່, ລູກຫຼານທີ່ກະຕັນຍູ, ຄວາມສຸກໃນບັ້ນປາຍຊີວິດທີ່ພວກເຂົາຈະໄດ້ດຳລົງຊີວິດຂອງພວກເຂົາຢ່າງສະຫງົບສຸກ... ເປັນເວລາຫຼາຍສິບ, ຫຼາຍພັນ, ຫຼາຍໝື່ນປີຈົນເຖິງປັດຈຸບັນ, ຜູ້ຄົນໄດ້ເສຍເວລາຂອງພວກເຂົາໃນລັກສະນະນີ້ ໂດຍບໍ່ມີໃຜສ້າງຊີວິດທີ່ສົມບູນ, ທຸກຄົນພຽງແຕ່ເຈດຕະນາເຂັ່ນຂ້າກັນໃນໂລກທີ່ມືດມົວນີ້, ແຂ່ງຂັນເພື່ອຊື່ສຽງ ແລະ ຊັບສິນ ແລະ ເຈດຕະນາວາງແຜນທຳລາຍເຊິ່ງກັນແລະກັນ. ມີໃຜແດ່ທີ່ເຄີຍສະແຫວງຫາຄວາມປະສົງຂອງພຣະເຈົ້າ? ມີໃຜແດ່ທີ່ເຄີຍໃສ່ໃຈພາລະກິດຂອງພຣະເຈົ້າ? ທຸກພາກສ່ວນຂອງມະນຸດຊາດທີ່ຖືກຄອບງຳໂດຍອິດທິພົນແຫ່ງຄວາມມືດໄດ້ກາຍເປັນທຳມະຊາດຂອງມະນຸດຕັ້ງແຕ່ໃດມາ ແລະ ດ້ວຍເຫດນັ້ນ ມັນຈຶ່ງຍາກທີ່ຈະປະຕິບັດພາລະກິດຂອງພຣະເຈົ້າ ແລະ ນອກນັ້ນ ຜູ້ຄົນກໍຍິ່ງບໍ່ມີຈິດໃຈທີ່ຈະສົນໃຈຕໍ່ສິ່ງທີ່ພຣະເຈົ້າໄດ້ມອບໝາຍ

ໃຫ້ກັບພວກເຂົາໃນປັດຈຸບັນ. ຢ່າງໃດກໍຕາມ, ເຮົາເຊື່ອວ່າຜູ້ຄົນຈະບໍ່ຂັດຂ້ອງທີ່ເຮົາກ່າວພຣະທຳເຫຼົ່ານີ້ ເພາະວ່າສິ່ງທີ່ເຮົາກຳລັງເວົ້າແມ່ນກ່ຽວກັບປະຫວັດສາດພັນປີ. ການກ່າວເຖິງປະຫວັດສາດໝາຍເຖິງຄວາມຈິງ ແລະ ຍິ່ງໄປກວ່ານັ້ນກໍເປັນເລື່ອງອັບອາຍຂາຍໜ້າທີ່ທຸກຄົນສາມາດເຫັນໄດ້ຢ່າງຊັດເຈນ, ແລ້ວແມ່ນຫຍັງຄືຜົນຂອງການເວົ້າໃນສິ່ງທີ່ກົງກັນຂ້າມກັບຄວາມຈິງ? ເຖິງຢ່າງໃດກໍຕາມເຮົາຍັງເຊື່ອວ່າຜູ້ຄົນທີ່ມີເຫດຜົນ ເມື່ອໄດ້ເຫັນພຣະທຳເຫຼົ່ານີ້ແລ້ວ ຈະຕື່ນຂຶ້ນ ແລະ ພະຍາຍາມກ້າວໄປຂ້າງໜ້າ. ພຣະເຈົ້າຫວັງວ່າ ມະນຸດຈະສາມາດດຳລົງຊີວິດ ແລະ ປະຕິບັດພາລະກິດຢ່າງສະຫງົບ ແລະ ດ້ວຍຄວາມພໍໃຈ ໃນຂະນະດຽວກັນກໍສາມາດຮັກພຣະເຈົ້າເຊັ່ນກັນ. ມັນຄືຄວາມປະສົງຂອງພຣະເຈົ້າທີ່ຈະໃຫ້ມະນຸດຊາດທຸກຄົນເຂົ້າສູ່ການພັກຜ່ອນ; ຍິ່ງໄປກວ່ານີ້ ການເຮັດໃຫ້ແຜ່ນດິນໂລກທັງໝົດເຕັມໄປດ້ວຍຄວາມສະຫງ່າລາສີຂອງພຣະເຈົ້າກໍຄືຄວາມປາຖະໜາທີ່ຍິ່ງໃຫຍ່ຂອງພຣະເຈົ້າ. ມັນເປັນເລື່ອງທີ່ອັບອາຍຫຼາຍທີ່ມະນຸດຍັງຈົມຢູ່ກັບການຂາດສະຕິ ແລະ ບໍ່ຕື່ນຕົວ, ຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮຸນແຮງ ຈົນປັດຈຸບັນ ພວກເຂົາແມ່ນບໍ່ມີລັກສະນະຂອງມະນຸດອີກແລ້ວ. ສະນັ້ນຄວາມຄິດຂອງມະນຸດ, ສິນທຳ ແລະ ການສຶກສາແມ່ນໂສ້ສຳຄັນອັນໜຶ່ງ ແລະ ການຝຶກຝົນຮຽນຮູ້ກ່ຽວກັບໜັງສືວັດທະນະທຳແມ່ນອີກໂສ້ໜຶ່ງ ທີ່ດີກວ່າໃນການເພີ່ມຄວາມສາມາດກ່ຽວກັບວັດທະນະທຳຂອງມະນຸດ ແລະ ປ່ຽນແປງທັດສະນະຝ່າຍວິນຍານຂອງພວກເຂົາ.

ຕາມຄວາມເປັນຈິງແລ້ວ, ສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດຊາດກໍບໍ່ໄດ້ສູງສໍ່ານັ້ນ, ແຕ່ຍ້ອນຊ່ອງຫວ່າງລະຫວ່າງຄວາມສາມາດຂອງຜູ້ຄົນ ແລະ ມາດຕະຖານທີ່ພຣະເຈົ້າຮຽກຮ້ອງແມ່ນສູງຫຼາຍ, ຄົນສ່ວນໃຫຍ່ຈຶ່ງພຽງແຕ່ຍົກຫົວຂອງພວກເຂົາຂຶ້ນ ແລະ ຫຼຽວເບິ່ງທິດທາງທີ່ສອດຄ່ອງກັບເງື່ອນໄຂຂອງພຣະເຈົ້າ ແຕ່ຂາດຄວາມສາມາດທີ່ຈະປະຕິບັດຕາມສິ່ງເຫຼົ່ານັ້ນ. ຄຸນສົມບັດໂດຍກຳເນີດຂອງຜູ້ຄົນ ພ້ອມກັບສິ່ງທີ່ພວກເຂົາປະກອບມີຫຼັງຈາກເກີດມາ ແມ່ນບໍ່ພຽງພໍທີ່ຈະບັນລຸຕາມເງື່ອນໄຂຂອງພຣະເຈົ້າ. ແຕ່ການເຂົ້າໃຈພຽງເລື່ອງນີ້ເທົ່ານັ້ນບໍ່ແມ່ນວິທີແກ້ໄຂທີ່ແນ່ນອນເຊັ່ນກັນ. ນໍ້າທີ່ຢູ່ໄລຍະໄກບໍ່ສາມາດລະງັບຄວາມກະຫາຍທັນທີທັນໃດໄດ້. ເຖິງແມ່ນວ່າຜູ້ຄົນຮູ້ຈັກວ່າຕົນເອງຕໍ່າກວ່າຂີ້ຝຸ່ນ, ແຕ່ຖ້າພວກເຂົາບໍ່ມີຄວາມເດັດຂາດທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ ກໍແຮງໄກທີ່ພວກເຈົ້າຈະສາມາດບັນລຸເງື່ອນໄຂຂອງພຣະເຈົ້າໄດ້, ແລ້ວຄວາມຮູ້ປະເພດນີ້ຈະມີຄ່າຫຍັງ? ມັນບໍ່ຄືກັນກັບການຕັກນໍ້າໃສ່ເຂິງຮ່ອນບໍ ເຊິ່ງໝາຍເຖິງຄວາມພະຍາຍາມທີ່ບໍ່ມີປະໂຫຍດ? ຈຸດສຳຄັນທີ່ສຸດໃນສິ່ງທີ່ເຮົາກຳລັງເວົ້ານີ້ແມ່ນກ່ຽວຂ້ອງກັບທາງເຂົ້າ; ນັ້ນຄືຫົວຂໍ້ຫຼັກ.

ໃນລະຫວ່າງເສັ້ນທາງແຫ່ງການເຂົ້າສູ່ຂອງມະນຸດ, ຊີວິດກໍເປັນຕາເບື່ອຢູ່ສະເໝີ, ເຕັມໄປດ້ວຍອົງປະກອບທີ່ບໍ່ປ່ຽນຈັກເທື່ອຂອງຊີວິດຝ່າຍວິນຍານ ເຊັ່ນ ການອະທິຖານໃນບາງຄັ້ງ, ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ຫຼື ຈັດຕັ້ງການຊຸມນຸມ ເພື່ອວ່າຜູ້ຄົນຈະຮູ້ສຶກຢູ່ສະເໝີວ່າ ການເຊື່ອໃນພຣະເຈົ້າບໍ່ໄດ້ນຳຄວາມສຸກທີ່ຍິ່ງໃຫຍ່ມາໃຫ້ເລີຍ. ກິດຈະກຳຝ່າຍວິນຍານດັ່ງກ່າວຖືກປະຕິບັດບົນພື້ນຖານແຫ່ງອຸປະນິໄສເດີມຂອງມະນຸດຊາດຢູ່ສະເໝີ ເຊິ່ງຖືກຊາຕານເຮັດໃຫ້ເສື່ອມຊາມ. ເຖິງແມ່ນບາງເທື່ອຜູ້ຄົນສາມາດຮັບເອົາແສງສະຫວ່າງຂອງພຣະວິນຍານບໍລິສຸດ, ຄວາມຄິດເດີມ, ອຸປະນິໄສ, ວິຖີຊີວິດ

ແລະ ນິໄສຂອງພວກເຂົາກໍຍັງຝັງຮາກຢູ່ພາຍໃນ ແລະ ດ້ວຍເຫດນັ້ນ ທຳມະຊາດຂອງພວກເຂົາຈຶ່ງຍັງບໍ່ປ່ຽນແປງ. ການກະທຳແບບງົມງວາຍຂອງຜູ້ຄົນ ແມ່ນສິ່ງທີ່ພຣະເຈົ້າກຽດຊັງທີ່ສຸດ, ແຕ່ຫຼາຍຄົນກໍຍັງບໍ່ສາມາດປະຖິ້ມສິ່ງເຫຼົ່ານັ້ນໄດ້, ພວກເຂົາຄິດວ່າການກະທຳແບບງົມງວາຍເຫຼົ່ານັ້ນແມ່ນຖືກບັນຍັດໂດຍພຣະເຈົ້າ ແລະ ແມ່ນແຕ່ປັດຈຸບັນກໍຍັງບໍ່ຍອມຖິ້ມສິ່ງເຫຼົ່ານັ້ນຢ່າງແທ້ຈິງ. ສິ່ງດັ່ງກ່າວມານັ້ນແມ່ນສິ່ງທີ່ຄົນໜຸ່ມຈັດກຽມສຳລັບງານດອງ ແລະ ເຄື່ອງແຕ່ງກາຍຂອງເຈົ້າສາວ; ຂອງຂວັນທີ່ເປັນເງິນ, ງານກິນລ້ຽງ ແລະ ພິທີກຳໃນງານສະເຫຼີມສະຫຼອງທົ່ວໄປ; ມັນເປັນປະເພນີບູຮານທີ່ຖືກສືບທອດກັນມາແຕ່ດົນນານ; ພິທີກຳງົມງວາຍທີ່ໄຮ້ຄວາມໝາຍທັງໝົດທີ່ຖືກໃຊ້ໃນງານຄົນຕາຍ ແລະ ພິທີຝັງສົບຂອງພວກເຂົາ: ສິ່ງເຫຼົ່ານີ້ຍິ່ງເປັນທີ່ກຽດຊັງສຳລັບພຣະເຈົ້າ. ແມ່ນແຕ່ມື້ແຫ່ງການນະມັດສະການ (ລວມເຖິງວັນຊະບາໂຕ ຕາມທີ່ໂລກແຫ່ງສາສະໜາໄດ້ຮັກສາໄວ້) ກໍເປັນທີ່ກຽດຊັງສຳລັບພຣະອົງ; ຄວາມສຳພັນໃນສັງຄົມ ແລະ ການມີປະຕິກິລິຍາທາງໂລກລະຫວ່າງມະນຸດກໍລ້ວນແລ້ວແຕ່ເປັນທີ່ກຽດຊັງ ແລະ ຖືກປະຕິເສດໂດຍພຣະເຈົ້າ. ແມ່ນແຕ່ເທດສະການລະດູໃບໄມ້ປົ່ງ ແລະ ວັນຄຣິສມາດ ເຊິ່ງເປັນທີ່ຮູ້ຈັກຂອງທຸກຄົນ ກໍຍັງບໍ່ໄດ້ຖືກບັນຍັດໂດຍພຣະເຈົ້າ ບໍ່ຕ້ອງເວົ້າເຖິງຂອງຫຼິ້ນ ແລະ ການຕົບແຕ່ງສຳລັບມື້ພັກເທດສະການເຫຼົ່ານີ້ເຊັ່ນ: ຄຳກອນ, ບັ້ງກະໂພກ, ໂຄມໄຟ, ພິທີສິນມະຫາສະນິດ, ຂອງຂວັນໃນວັນຄຣິສມາດ ແລະ ງານລ້ຽງສະຫຼອງວັນຄຣິສມາດ, ສິ່ງເຫຼົ່ານີ້ບໍ່ແມ່ນພະທຽມທີ່ຢູ່ໃນຄວາມຄິດຂອງມະນຸດບໍ? ການຫັກເຂົ້າຈີ່ໃນວັນຊະບາໂຕ, ເຫຼົ້າແວງ ແລະ ຜ້າຝ້າຍລິນິນທີ່ສວຍງາມຍິ່ງເປັນພະທຽມຢ່າງຊັດເຈນຂຶ້ນອີກ. ມື້ເທດສະການປະເພນີທັງໝົດໃນປະເທດຈີນ ເຊັ່ນ: ວັນແຫ່ສິງໂຕ, ວັນແຂ່ງເຮືອມັງກອນ, ເທດສະການກາງລະດູໃບໄມ້ຫຼົ່ນ, ເທດສະການລາບາ ແລະ ປີໃໝ່ ແລະ ເທດສະການຕ່າງໆໃນໂລກແຫ່ງສາສະໜາ ເຊັ່ນ: ວັນຄືນພະຊົນ, ມື້ຮັບບັບຕິດສະມາ ແລະ ວັນຄຣິສມາດ, ເທດສະການທີ່ບໍ່ມີເຫດຜົນເຫຼົ່ານີ້ຖືກຈັດກຽມ ແລະ ສືບຕໍ່ກັນມາຢ່າງແຜ່ຫຼາຍຈາກຍຸກບູຮານຈົນເຖິງປັດຈຸບັນໂດຍຄົນຫຼວງຫຼາຍ. ມັນຄືຈິນຕະນາການແບບເພີ້ຝັນຂອງມະນຸດ ແລະ ແນວຄິດປະດິດສ້າງທີ່ເຮັດໃຫ້ສິ່ງເຫຼົ່ານັ້ນຖືກສືບຕໍ່ມາຈົນເຖິງປັດຈຸບັນ. ສິ່ງເຫຼົ່ານັ້ນເບິ່ງຄືກັບວ່າບໍ່ມີຂໍ້ບົກຜ່ອງ, ແຕ່ຕາມຄວາມເປັນຈິງແລ້ວ ພວກມັນຄືກົນອຸບາຍທີ່ຊາຕານຫຼອກລວງມະນຸດຊາດ. ຍິ່ງບ່ອນໃດທີ່ເປັນສະຖານທີ່ຊຸມນຸມຂອງຊາຕານ ແລະ ເປັນສະຖານທີ່ຫຼ້າສະໄໝ ແລະ ຫຼ້າຫຼັງສໍ່າໃດ, ປະເພນີແບບສັກດີນານີ້ກໍຍິ່ງຖືກຝັງແໜ້ນໃນສ່ວນເລິກຂອງຜູ້ຄົນຫຼາຍສໍ່ານັ້ນ. ສິ່ງເຫຼົ່ານັ້ນຜູກມັດຜູ້ຄົນຢ່າງແໜ້ນ ເຮັດໃຫ້ບໍ່ມີບ່ອນວ່າງທີ່ຈະເຄື່ອນໄຫວໄດ້ເລີຍ. ຫຼາຍເທດສະການທີ່ຢູ່ໃນໂລກແຫ່ງສາສະໜາເບິ່ງຄືກັບວ່າ ມັນສະແດງເຖິງຄວາມເກົ່າແກ່ທີ່ຍິ່ງໃຫຍ່ ແລະ ສ້າງຂົວເຊື່ອມໂຍງກັບພາລະກິດຂອງພຣະເຈົ້າ, ແຕ່ຕາມຄວາມເປັນຈິງແລ້ວ ພວກມັນເປັນສາຍເຊືອກທີ່ຊາຕານໃຊ້ເພື່ອຜູກມັດຜູ້ຄົນບໍ່ໃຫ້ຮູ້ຈັກພຣະເຈົ້າ, ພວກມັນລ້ວນແລ້ວແຕ່ເປັນອຸບາຍເລ່ຫຼ່ຽມຂອງຊາຕານ. ໃນຄວາມຈິງ, ເມື່ອຂັ້ນຕອນຂອງພາລະກິດຂອງພຣະເຈົ້າສຳເລັດລົງ, ພຣະອົງໄດ້ທຳລາຍເຄື່ອງມື ແລະ ຮູບແບບໃນເວລານັ້ນແລ້ວ ໂດຍບໍ່ປ່ອຍໃຫ້ເຫຼືອຮ່ອງຮອຍໄວ້ເລີຍ. ເຖິງຢ່າງໃດກໍຕາມ "ຜູ້ເຊື່ອທີ່ເຫຼື້ອມໃສ" ກໍສືບຕໍ່ນະມັດສະການວັດຖຸສິ່ງຂອງເຫຼົ່ານັ້ນທີ່ຈັບຕ້ອງໄດ້; ໃນຂະນະດຽວກັນ ພວກເຂົາກໍ

ກັບສິ່ງທີ່ພຣະເຈົ້າມີນັ້ນໄວ້ຢູ່ໃນເບື້ອງຫຼັງຂອງຄວາມຄິດຂອງພວກເຂົາ, ບໍ່ສຶກສາມັນອີກຕໍ່ໄປ, ເບິ່ງຄືວ່າ ເຕັມໄປດ້ວຍຄວາມຮັກສຳລັບພຣະເຈົ້າ ແຕ່ຕາມຄວາມເປັນຈິງແລ້ວ ພວກເຂົາໄດ້ຜັກດັນພຣະອົງໃຫ້ອອກຈາກເຮືອນຂອງພວກເຂົາຕັ້ງແຕ່ດົນມາແລ້ວ ແລະ ວາງຊາຕານໄວ້ເທິງໂຕະເພື່ອນະມັດສະການ. ຮູບພາບຂອງພຣະເຢຊູ, ໄມ້ກາງແຂນ, ມາຣີອາ, ການຮັບບັບຕິດສະມາຂອງພຣະເຢຊູ ແລະ ອາຫານຄາບສຸດທ້າຍ, ຜູ້ຄົນເຄົາລົບນັບຖືສິ່ງເຫຼົ່ານີ້ເປັນພຣະຜູ້ເປັນເຈົ້າແຫ່ງສະຫວັນ, ໃນຂະນະດຽວກັນກໍຮ້ອງອອກເປັນສຽງດັງຊໍ້າແລ້ວຊໍ້າອີກວ່າ "ພຣະເຈົ້າພຣະບິດາແຫ່ງຟ້າສະຫວັນ". ສິ່ງນີ້ບໍ່ແມ່ນລ້ອນແລ້ວແຕ່ເປັນເລື່ອງຕະຫຼົກບໍ? ຈົນເຖິງມື້ນີ້, ຄຳເວົ້າ ແລະ ການປະຕິບັດທີ່ຄ້າຍຄືກັນຫຼາຍຢ່າງ ທີ່ຖືກສືບຕໍ່ທ່າມກາງມະນຸດຊາດແມ່ນເປັນທີ່ກຽດຊັງສຳລັບພຣະເຈົ້າ; ພວກມັນກີດຂວາງຫົນທາງທີ່ຢູ່ເບື້ອງໜ້າສຳລັບພຣະເຈົ້າຢ່າງຮ້າຍແຮງ ແລະ ຍິ່ງໄປກວ່ານັ້ນກໍໄດ້ສ້າງຄວາມລົ້ມເຫຼວໃຫ້ກັບທາງເຂົ້າຂອງມະນຸດ. ນອກຈາກລະດັບທີ່ຊາຕານເຮັດໃຫ້ມະນຸດຊາດເສື່ອມຊາມແລ້ວ, ຂ້າງໃນຂອງຜູ້ຄົນກໍເຕັມໄປດ້ວຍສິ່ງຕ່າງໆ ເຊັ່ນ: ກົດລະບຽບຂອງພະຍານລີ່, ປະສົບການຂອງລໍເຣັນ, ການສຳຫຼວດຂອງຜູ້ເຝົ້າເບິ່ງໜີ່ ແລະ ວຽກງານຂອງໂປໂລ. ບໍ່ມີທາງທີ່ຈະໃຫ້ພຣະເຈົ້າປະຕິບັດພາລະກິດໃນມະນຸດໄດ້, ເພາະວ່າ ພວກເຂົາມີຄວາມເຊື່ອໃນກົດໝາຍ, ກົດລະບຽບ, ຂໍ້ກຳນົດ, ລະບົບ ແລະ ສິ່ງອື່ນໆທີ່ຄ້າຍຄືກັນນັ້ນຫຼາຍເກີນໄປ; ນອກຈາກກະແສງົມງວາຍແບບສັກດີນາຂອງຜູ້ຄົນແລ້ວ ສິ່ງເຫຼົ່ານີ້ຍັງໄດ້ເຂົ້າຍຶດ ແລະ ກືນກິນມະນຸດ. ມັນຄືກັບວ່າຄວາມຄິດຂອງຜູ້ຄົນເປັນຮູບເງົາທີ່ເປັນຕາສົນໃຈ ເຊິ່ງບັນລະຍາຍເຖິງເທບນິຍາຍໃນຮູບແບບເຕັມສີ, ໂດຍມີສິ່ງມີຊີວິດທີ່ວິເສດກຳລັງຂີ່ກ້ອນເມກ, ເຕັມໄປດ້ວຍພະລັງຈິນຕະນາການຫຼາຍສິ່ງຢ່າງ ຈົນເຮັດໃຫ້ຜູ້ຄົນປະຫຼາດໃຈ, ເຮັດໃຫ້ຜູ້ຄົນເມົາມົວ ແລະ ເວົ້າບໍ່ອອກ. ຖ້າຈະເວົ້າຄວາມຈິງແລ້ວ, ພາລະກິດທີ່ພຣະເຈົ້າສະເດັດມາເພື່ອປະຕິບັດໃນປັດຈຸບັນ ຕົ້ນຕໍແມ່ນເພື່ອຈັດການ ແລະ ກຳຈັດແນວຄວາມຄິດງົມງວາຍຂອງມະນຸດ ແລະ ປ່ຽນແປງທັດສະນະຄະຕິຂອງພວກເຂົາທັງໝົດ. ພາລະກິດຂອງພຣະເຈົ້າບໍ່ໄດ້ຄົງຢູ່ຈົນເຖິງປັດຈຸບັນ ເນື່ອງຈາກມໍລະດົກທີ່ແມ່ນສິ່ງທີ່ຖືກມະນຸດຊາດສືບຕໍ່ຈາກຮຸ່ນສູ່ຮຸ່ນ; ມັນເປັນພາລະກິດທີ່ພຣະອົງໄດ້ເລີ່ມຕົ້ນດ້ວຍພຣະອົງເອງ ແລະ ຖືກເຮັດໃຫ້ສຳເລັດດ້ວຍພຣະອົງ ແລະ ບໍ່ຈຳເປັນຕ້ອງສືບຕໍ່ໃຫ້ເປັນມໍລະດົກຂອງມະນຸດຝ່າຍວິນຍານທີ່ຍິ່ງໃຫຍ່ ຫຼື ມອບໝາຍພາລະກິດໃດກໍຕາມໃຫ້ກັບກຸ່ມຄົນທີ່ເປັນຕົວແທນຂອງພຣະເຈົ້າປະຕິບັດໃນຍຸກໃດຍຸກໜຶ່ງ. ມະນຸດບໍ່ຈຳເປັນຕ້ອງສົນໃຈກັບສິ່ງເຫຼົ່ານີ້. ໃນປັດຈຸບັນ ພຣະເຈົ້າມີຮູບແບບການເວົ້າ ແລະ ການປະຕິບັດພາລະກິດແບບໃໝ່, ແລ້ວເປັນຫຍັງມະນຸດຈຶ່ງຕ້ອງສ້າງບັນຫາໃຫ້ກັບຕົນເອງ? ຖ້າມະນຸດຍ່າງໃນເສັ້ນທາງແຫ່ງປັດຈຸບັນພາຍໃນກະແສປັດຈຸບັນໃນຂະນະທີ່ກຳລັງສືບຕໍ່ມໍລະດົກຂອງ "ບັນພະບຸລຸດ" ຂອງພວກເຂົາ, ພວກເຂົາກໍຈະບໍ່ໄປເຖິງຈຸດໝາຍປາຍທາງຂອງພວກເຂົາຈັກເທື່ອ. ພຣະເຈົ້າຮູ້ສຶກລັງກຽດພຶດຕິກຳໃນຮູບແບບນີ້ຂອງມະນຸດທີ່ສຸດຄືກັນກັບທີ່ພຣະອົງກຽດຊັງປີ, ເດືອນ ແລະ ມື້ໃນໂລກມະນຸດ.

ວິທີທີ່ຈະປ່ຽນແປງອຸປະນິໄສຂອງມະນຸດໄດ້ດີທີ່ສຸດກໍຄືປີ້ນຄືນສ່ວນຕ່າງໆເຫຼົ່ານັ້ນທີ່ຢູ່ໃນສ່ວນເລິກສຸດຂອງຫົວໃຈມະນຸດທີ່ຖືກພິດຢ່າງຮ້າຍແຮງ, ເຮັດໃຫ້ຜູ້ຄົນເລີ່ມປ່ຽນແປງຄວາມຄິດ ແລະ

ສິນທຳຂອງພວກເຂົາ. ກ່ອນອື່ນໝົດ, ຜູ້ຄົນຈຳເປັນຕ້ອງເຫັນຢ່າງຊັດເຈນວ່າ ພິທີທາງສາສະໜາເຫຼົ່ານີ້, ກິດຈະກຳທາງສາສະໜາ, ປີ ແລະ ເດືອນ ແລະ ເທດສະການຕ່າງເປັນທີ່ກຽດຊັງສຳລັບພຣະເຈົ້າ. ພວກເຂົາຄວນປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກຂໍ້ຜູກມັດກ່ຽວກັບຄວາມຄິດແບບສັກດີນາເຫຼົ່ານີ້ ແລະ ທຳລາຍລ້າງຮ່ອງຮອຍທຸກຢ່າງກ່ຽວກັບນິໄສທີ່ຝັງເລິກຂອງພວກເຂົາທີ່ນິຍົມໄປຝ່າຍຄວາມງົມງວາຍ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ມີຢູ່ໃນທາງເຂົ້າຂອງມະນຸດຊາດ. ພວກເຈົ້າຕ້ອງເຂົ້າໃຈວ່າເປັນຫຍັງພຣະເຈົ້າຈຶ່ງນຳພາມະນຸດຊາດອອກຈາກທາງໂລກ ແລະ ເຂົ້າໃຈອີກຄັ້ງວ່າເປັນຫຍັງພຣະອົງຈຶ່ງນຳພາມະນຸດໃຫ້ອອກຈາກກົດລະບຽບ ແລະ ຂໍ້ກຳນົດ. ນີ້ແມ່ນປະຕູທີ່ພວກເຈົ້າຈະເຂົ້າໄປ ແລະ ເຖິງແມ່ນສິ່ງເຫຼົ່ານີ້ບໍ່ກ່ຽວຂ້ອງກັບປະສົບການຝ່າຍວິນຍານຂອງພວກເຈົ້າ, ພວກມັນກໍເປັນສິ່ງກີດຂວາງທີ່ໃຫຍ່ທີ່ສຸດ ທີ່ກຳລັງຂັດຂວາງທາງເຂົ້າຂອງພວກເຈົ້າ, ກີດກັນພວກເຈົ້າຈາກການຮູ້ຈັກກັບພຣະເຈົ້າ. ສິ່ງເຫຼົ່ານັ້ນເປັນແຫເພື່ອໃຫ້ຜູ້ຄົນຕິດຄາ. ຫຼາຍຄົນອ່ານພຣະຄຳພີຫຼາຍເກີນໄປ ແລະ ສາມາດແມ່ນແຕ່ທ່ອງຈຳຂໍ້ພຣະທຳຢ່າງຫຼວງຫຼາຍຈາກພຣະຄຳພີ. ໃນທາງເຂົ້າຂອງພວກເຂົາໃນປັດຈຸບັນ, ຜູ້ຄົນໃຊ້ພຣະຄຳພີເພື່ອວັດແທກພາລະກິດຂອງພຣະເຈົ້າຢ່າງບໍ່ມີສະຕິ, ຄືກັບວ່າພື້ນຖານຂອງຂັ້ນຕອນນີ້ໃນພາລະກິດຂອງພຣະເຈົ້າແມ່ນພຣະຄຳພີ ແລະ ແຫຼ່ງກຳເນີດຂອງພາລະກິດນີ້ກໍແມ່ນພຣະຄຳພີ. ເມື່ອພາລະກິດຂອງພຣະເຈົ້າສອດຄ່ອງກັບພຣະຄຳພີ, ຜູ້ຄົນກໍສະໜັບສະໜູນພາລະກິດຂອງພຣະເຈົ້າຢ່າງໜັກແໜ້ນ ແລະ ເຄົາລົບພຣະອົງດ້ວຍຄວາມນັບຖືຢ່າງບໍ່ເຄີຍມີມາກ່ອນ; ເມື່ອພາລະກິດຂອງພຣະເຈົ້າບໍ່ສອດຄ່ອງກັບພຣະຄຳພີ, ຜູ້ຄົນກໍກັງວົນໃຈຫຼາຍຈົນພວກເຂົາເຫື່ອແຕກ, ຄົ້ນຫາພື້ນຖານແຫ່ງພາລະກິດຂອງພຣະເຈົ້າໃນພຣະຄຳພີ; ຖ້າພາລະກິດຂອງພຣະເຈົ້າບໍ່ໄດ້ຖືກກ່າວເຖິງໃນພຣະຄຳພີ, ຜູ້ຄົນກໍຈະບໍ່ຄຳນຶງເຖິງພຣະເຈົ້າ. ມັນສາມາດເວົ້າໄດ້ວ່າ ເທົ່າທີ່ພາລະກິດຂອງພຣະເຈົ້າໃນປັດຈຸບັນເຮັດໄດ້ ຄົນສ່ວນໃຫຍ່ກໍຍອມຮັບພາລະກິດນັ້ນດ້ວຍຄວາມລະມັດລະວັງ, ເລືອກໃນການເຊື່ອຟັງພາລະກິດນັ້ນ ແລະ ຮູ້ສຶກບໍ່ແຕກຕ່າງເມື່ອຮູ້ຈັກພາລະກິດນັ້ນ; ແຕ່ສຳລັບສິ່ງຕ່າງໆທີ່ຢູ່ໃນອະດີດ, ພວກເຂົາແມ່ນຈະຍຶດຖືແຕ່ເຄິ່ງໜຶ່ງ ແລະ ປະຖິ້ມອີກເຄິ່ງໜຶ່ງ. ສິ່ງນີ້ຈະຖືກເອີ້ນວ່າທາງເຂົ້າໄດ້ບໍ? ການຍຶດຖືເອົາໜັງສືຂອງຄົນອື່ນເປັນຄືກັບຊັບສົມບັດ ແລະ ປະຕິບັດຕໍ່ໜັງສືເຫຼົ່ານັ້ນຄືກັບກະແຈທອງສູ່ປະຕູແຫ່ງອານາຈັກ, ຜູ້ຄົນສະແດງໃຫ້ເຫັນເຖິງຄວາມບໍ່ສົນໃຈໃນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກພວກເຂົາໃນປັດຈຸບັນເລີຍ. ຍິ່ງໄປກວ່ານັ້ນ, “ຜູ້ຊ່ຽວຊານທີ່ສະຫຼາດ” ຫຼາຍຄົນຖືພຣະທຳຂອງພຣະເຈົ້າໃນມືເບື້ອງຊ້າຍຂອງພວກເຂົາ ແລະ “ຜົນງານທີ່ຍິ່ງໃຫຍ່” ຂອງຄົນອື່ນໃນມືເບື້ອງຂວາຂອງພວກເຂົາ, ຄືກັນກັບວ່າ ພວກເຂົາຕ້ອງການຄົ້ນຫາພື້ນຖານແຫ່ງພຣະທຳຂອງພຣະເຈົ້າໃນປັດຈຸບັນທີ່ຢູ່ພາຍໃນຜົນງານທີ່ຍິ່ງໃຫຍ່ເຫຼົ່ານີ້ເພື່ອພິສູດແທ້ຈິງວ່າ ພຣະທຳຂອງພຣະເຈົ້າຖືກຕ້ອງ ແລະ ພວກເຂົາເຖິງກັບອະທິບາຍພຣະທຳຂອງພຣະເຈົ້າໃຫ້ກັບຄົນອື່ນ ໂດຍຮວມສິ່ງເຫຼົ່ານັ້ນເຂົ້າກັນກັບຜົນງານທີ່ຍິ່ງໃຫຍ່, ຄືກັນກັບວ່າພວກເຂົາເປັນຄົນທີ່ສ້າງຜົນງານນັ້ນ. ຖ້າຈະເວົ້າຄວາມຈິງ, ມີ “ນັກຄົ້ນຄວ້າທາງວິທະຍາສາດ” ຫຼາຍຄົນທ່າມກາງມະນຸດຊາດ ທີ່ບໍ່ເຄີຍຄິດເຖິງຜົນສຳເລັດກ່ຽວກັບວິທະຍາສາດຫຼ້າສຸດໃນປັດຈຸບັນເປັນຢ່າງຍິ່ງ ເຊິ່ງເປັນຜົນສຳເລັດກ່ຽວກັບວິທະຍາສາດທີ່ບໍ່ເຄີຍມີມາກ່ອນ (ເຊັ່ນ ພາລະກິດຂອງ

ພຣະເຈົ້າ, ພຣະທຳຂອງພຣະເຈົ້າ ແລະ ເສັ້ນທາງສຳລັບເຂົ້າສູ່ຊີວິດ), ສະນັ້ນ ຜູ້ຄົນຈຶ່ງລ້ວນແລ້ວແຕ່ "ເພິ່ງພາຕົນເອງ", "ເທດສະໜາ" ຢ່າງແຜ່ຫຼາຍດ້ວຍທັກສະການເວົ້າແບບຊວນເຊື່ອຂອງພວກເຂົາ ແລະ ໂອ້ອວດເຖິງ "ນາມທີ່ດີຂອງພຣະເຈົ້າ". ໃນຂະນະດຽວກັນ, ທາງເຂົ້າຂອງພວກເຂົາເອງກໍຢູ່ໃນອັນຕະລາຍ ແລະ ພວກເຂົາເບິ່ງຄືກັບວ່າຫ່າງໄກຈາກເງື່ອນໄຂຂອງພຣະເຈົ້າ ດ້ວຍວ່າ ການເນລະມິດສ້າງແມ່ນເລີ່ມຕົ້ນຈາກຊ່ວງເວລານີ້ໄປ. ມັນງ່າຍສໍ່າໃດທີ່ຈະປະຕິບັດພາລະກິດຂອງພຣະເຈົ້າ? ມັນເບິ່ງຄືກັບວ່າຜູ້ຄົນໄດ້ຕັດສິນໃຈແລ້ວທີ່ຈະປະເຄິ່ງໜຶ່ງຂອງພວກເຂົາໃຫ້ຢູ່ໃນມື້ວານ ແລະ ນຳອີກເຄິ່ງໜຶ່ງມາຢູ່ໃນປັດຈຸບັນ, ມອບເຄິ່ງໜຶ່ງໃຫ້ກັບຊາຕານ ແລະ ນຳສະເໜີອີກເຄິ່ງໜຶ່ງໃຫ້ກັບພຣະເຈົ້າ, ຄືກັນກັບວ່າ ນີ້ແມ່ນວິທີທີ່ຈະເຮັດໃຫ້ພວກເຂົາຮູ້ສຶກສະບາຍໃຈ ແລະ ຮູ້ສຶກເຖິງຄວາມສະບາຍບາງຢ່າງ. ໂລກຂ້າງໃນຂອງຜູ້ຄົນມີເລ່ລ່ຽມຫຼາຍ, ພວກເຂົາຢ້ານທີ່ຈະສູນເສຍບໍ່ແມ່ນແຕ່ມື້ອື່ນເທົ່ານັ້ນ ແຕ່ຍັງຢ້ານສູນເສຍມື້ວານອີກດ້ວຍ, ຢ້ານຢ່າງເລິກໆທີ່ຈະລ່ວງເກີນທັງຊາຕານ ແລະ ພຣະເຈົ້າແຫ່ງປັດຈຸບັນເຊິ່ງພວກເຂົາເຫັນພຣະອົງຄືກັບວ່າ ເປັນພຣະເຈົ້າ ແລະ ບໍ່ເປັນພຣະເຈົ້າ. ເພາະຜູ້ຄົນບໍ່ສາມາດຝຶກຝົນຄວາມຄິດ ແລະ ສິນທຳຂອງພວກເຂົາໃຫ້ຖືກຕ້ອງ, ພວກເຂົາຈຶ່ງຂາດໃນການແຍກແຍະເປັນພິເສດ ແລະ ພວກເຂົາບໍ່ສາມາດບອກໄດ້ແທ້ໆວ່າ ພາລະກິດໃນປັດຈຸບັນນີ້ເປັນຂອງພຣະເຈົ້າ ຫຼື ບໍ່. ບາງເທື່ອມັນເປັນຍ້ອນຄວາມຄິດແບບສັກດີນາ ແລະ ງົມງວາຍຂອງຜູ້ຄົນທີ່ຝັງເລິກຫຼາຍ ຈົນພວກເຂົາຈັດຄວາມເຊື່ອງົມງວາຍ ແລະ ຄວາມຈິງ, ພຣະເຈົ້າ ແລະ ພະທຽມເຂົ້າໃນປະເພດດຽວກັນມະຕະຫຼອດ ໂດຍບໍ່ສົນໃຈທີ່ຈະແຍກແຍະລະຫວ່າງສິ່ງເຫຼົ່ານີ້ ແລະ ພວກເຂົາເບິ່ງຄືກັບວ່າ ບໍ່ສາມາດຈຳແນກອອກໄດ້ຢ່າງຊັດເຈນ ແມ່ນແຕ່ຫຼັງຈາກທີ່ພວກເຂົາໄດ້ພະຍາຍາມຄິດຢ່າງໜັກແລ້ວ. ນັ້ນຄືເຫດຜົນທີ່ວ່າເປັນຫຍັງມະນຸດຈຶ່ງຢຸດຢູ່ໃນເສັ້ນທາງຂອງພວກເຂົາ ແລະ ບໍ່ກ້າວໄປຂ້າງໜ້າອີກຕໍ່ໄປ. ທຸກບັນຫາເຫຼົ່ານີ້ເກີດມາຈາກການທີ່ຜູ້ຄົນຂາດການສຶກສາໃນອຸດົມຄະຕິທີ່ຖືກຕ້ອງ ເຊິ່ງສ້າງຄວາມຫຍຸ້ງຍາກຢ່າງໃຫຍ່ໃຫ້ກັບທາງເຂົ້າຂອງພວກເຂົາ. ຜົນຕາມມາກໍຄື ຜູ້ຄົນບໍ່ເຄີຍຮູ້ສຶກສົນໃຈໃນພາລະກິດຂອງພຣະເຈົ້າທີ່ແທ້ຈິງ, ແຕ່ດື້ດຶງທີ່ຈະຍຶດຕິດກັບ[1] ພາລະກິດຂອງມະນຸດ (ເຊັ່ນ: ຄົນທີ່ພວກເຂົາເຫັນວ່າເປັນຜູ້ຍິ່ງໃຫຍ່) ຄືກັບວ່າ ພວກເຂົາຖືກຕີກາດ້ວຍສິ່ງນັ້ນ. ສິ່ງເຫຼົ່ານີ້ບໍ່ແມ່ນຫົວຂໍ້ຫຼ້າສຸດທີ່ມະນຸດຄວນເຂົ້າສູ່ບໍ?

1 "ດື້ດຶງທີ່ຈະຍຶດຕິດກັບ" ແມ່ນໃຊ້ເພື່ອເຍາະເຍີ້ຍ. ວະລີນີ້ໝາຍເຖິງ ຜູ້ຄົນດື້ດຶງ ແລະ ຫົວແຂງ, ຍຶດຕິດຢູ່ກັບສິ່ງທີ່ຫຼ້າສະໄໝ ແລະ ບໍ່ເຕັມໃຈທີ່ຈະປະຖິ້ມສິ່ງເຫຼົ່ານັ້ນ.

# ພາລະກິດ ແລະ ທາງເຂົ້າ (4)

ຖ້າມະນຸດສາມາດເຂົ້າສູ່ອີງຕາມພາລະກິດຂອງພຣະວິນຍານບໍລິສຸດໄດ້ຢ່າງແທ້ຈິງ, ຊີວິດຂອງເຂົາກໍຈະງອກງາມຢ່າງໄວວາ, ຄືກັບໜໍ່ໄມ້ຫຼັງຈາກຝົນໃນລະດູໃບໄມ້ປົ່ງ. ເມື່ອຕັດສິນຈາກວຸດທິພາວະໃນປັດຈຸບັນຂອງຜູ້ຄົນສ່ວນໃຫຍ່, ຜູ້ຄົນແມ່ນບໍ່ໄດ້ໃຫ້ຄວາມສຳຄັນກັບຊີວິດ ແລະ ກົງກັນຂ້າມພວກເຂົາໃຫ້ຄວາມສຳຄັນກັບເລື່ອງໃດໜຶ່ງທີ່ປາກົດວ່າບໍ່ມີຜົນຕາມມາ ຫຼື ບໍ່ດັ່ງນັ້ນ ພວກເຂົາກໍຈະຟ້າວໄປບ່ອນນັ້ນ ແລະ ບ່ອນນີ້, ເຮັດວຽກຢ່າງໄຮ້ຈຸດໝາຍ ແລະ ໃນວິທີການທີ່ບໍ່ມີເປົ້າໝາຍ ແລະບໍ່ມີທິດທາງ, ໂດຍບໍ່ຮູ້ວ່າພວກເຂົາຄວນໄປໃນທິດທາງໃດ ແລະ ແຮງໄກທີ່ພວກເຂົາຈະຮູ້ວ່າໄປເພື່ອໃຜ. ພວກເຂົາພຽງແຕ່ "ປິດບັງຕົນເອງຢ່າງຖ່ອມຕົວ". ຄວາມຈິງກໍຄື ມີໜ້ອຍຄົນໃນທ່າມກາງພວກເຈົ້າທີ່ຮູ້ຈັກກ່ຽວກັບເຈດຕະນາຂອງພຣະເຈົ້າສຳລັບຍຸກສຸດທ້າຍ. ຫາຍາກທີ່ຈະມີຜູ້ໃດໃນບັນດາພວກເຈົ້າຮູ້ຈັກບາດກ້າວຂອງພຣະເຈົ້າ, ແຕ່ທີ່ຮ້າຍແຮງໄປກວ່ານັ້ນແມ່ນ ບໍ່ມີຜູ້ໃດຮູ້ຈັກວ່າຄວາມສຳເລັດສຸດທ້າຍຂອງພຣະເຈົ້າຈະແມ່ນຫຍັງ. ແຕ່ທຸກຄົນກໍຜ່ານການລົງວິໄນ ແລະ ການຈັດການຂອງຄົນອື່ນຜ່ານທາງຄວາມອົດທົນ ແລະ ຄວາມອົດກັ້ນທີ່ສຸດ, ຄືກັບວ່າກຳລັງເບັ່ງກ້າມຂອງພວກເຂົາ ແລະກຽມພ້ອມສຳລັບການຕໍ່ສູ້[1] ໂດຍຄາດໝາຍວ່າພວກເຂົາຈະໄດ້ຮັບເວລາແຫ່ງໄຊຊະນະຂອງພວກເຂົາ. ເຮົາຈະບໍ່ໃຫ້ຄຳເຫັນໃດໆກ່ຽວກັບ "ພາບແປກປະຫຼາດ" ເຫຼົ່ານີ້ທີ່ຢູ່ທ່າມກາງມະນຸດຊາດ, ແຕ່ມີຈຸດໜຶ່ງທີ່ພວກເຈົ້າທຸກຄົນຕ້ອງເຂົ້າໃຈ. ໃນຕອນນີ້ ຄົນສ່ວນໃຫຍ່ກຳລັງພັດທະນາສູ່ຄວາມຜິດປົກກະຕິ[2] ແລະ ໃນບາດກ້າວສູ່ທາງເຂົ້າຂອງພວກເຂົາ, ພວກເຂົາແມ່ນກຳລັງກ້າວເດີນໄປສູ່ທາງຕັນ[3]. ມີຫຼາຍຄົນທີ່ຄິດວ່າ ນັ້ນຄືດິນແດນໃນຝັນທີ່ຢູ່ນອກໂລກມະນຸດ ທີ່ມະນຸດປາຖະໜາຫາ ໂດຍເຊື່ອວ່າມັນຄືອານາຈັກແຫ່ງອິດສະຫຼະພາບ, ແຕ່ໃນຄວາມເປັນຈິງແລ້ວ ມັນບໍ່ໄດ້ເປັນແບບນັ້ນ ຫຼື ບາງເທື່ອອາດສາມາດເວົ້າໄດ້ວ່າ ຜູ້ຄົນໄດ້ໄປໃນທາງທີ່ຜິດແລ້ວ. ແຕ່ບໍ່ວ່າຜູ້ຄົນຈະກຳລັງເຮັດຫຍັງກໍຕາມ, ເຮົາຍັງຕ້ອງການທີ່ຈະລົມກ່ຽວກັບສິ່ງທີ່ມະນຸດຄວນເຂົ້າສູ່. ຄຸນຄວາມດີ ແລະ ຂໍ້ບົກຜ່ອງຂອງຝູງຊົນບໍ່ແມ່ນຫົວຂໍ້ຫຼັກຂອງການສົນທະນານີ້. ເຮົາຫວັງວ່າພວກເຈົ້າທຸກຄົນ ທີ່ເປັນອ້າຍເອື້ອຍນ້ອງ ຈະສາມາດຮັບເອົາພຣະທຳຂອງເຮົາໃນວິທີທີ່ຖືກຕ້ອງ ແລະ ບໍ່ເຂົ້າໃຈຜິດໃນເຈດຕະນາຂອງເຮົາ.

ພຣະເຈົ້າໄດ້ບັງເກີດເປັນມະນຸດໃນແຜ່ນດິນໃຫຍ່ຂອງປະເທດຈີນ ຫຼື ດ້ວຍຄຳເວົ້າຂອງເພື່ອນຮ່ວມຊາດຈາກຮົງກົງ ແລະ ໄຕ້ຫວັນກໍຄື: "ບຸກຄົນພາຍໃນ". ເມື່ອພຣະເຈົ້າລົງມາຈາກສະຫວັນເບື້ອງເທິງສູ່ແຜ່ນດິນໂລກ, ບໍ່ມີຜູ້ໃດໃນສະຫວັນ ຫຼື ເທິງແຜ່ນດິນໂລກທີ່ຮູ້ເຖິງສິ່ງນີ້, ຍ້ອນນີ້ແມ່ນ

1 "ກຳລັງເບັ່ງກ້າມຂອງພວກເຂົາ ແລະ ກຽມພ້ອມສຳລັບການຕໍ່ສູ້" ແມ່ນໃຊ້ເພື່ອເຍາະເຍີ້ຍ.

2 "ຄວາມຜິດປົກກະຕິ" ໝາຍຄວາມວ່າ ທາງເຂົ້າຂອງຜູ້ຄົນແມ່ນຜິດປົກກະຕິ ແລະ ປະສົບການຂອງພວກເຂົາແມ່ນລຳອຽງ.

3 "ທາງຕັນ" ໝາຍຄວາມວ່າ ເສັ້ນທາງທີ່ຜູ້ຄົນກຳລັງຍ່າງແມ່ນຂັດກັບຄວາມປະສົງຂອງພຣະເຈົ້າ.

ຄວາມໝາຍທີ່ແທ້ຈິງຂອງການທີ່ພຣະເຈົ້າກັບຄືນມາພາຍໃຕ້ການປົກປິດ. ພຣະອົງໄດ້ປະຕິບັດພາລະກິດ ແລະ ດຳລົງຊີວິດຢູ່ໃນເນື້ອໜັງເປັນເວລາດົນນານແລ້ວ ແຕ່ເຖິງຢ່າງນັ້ນກໍຕາມ ແມ່ນບໍ່ມີຜູ້ໃດຮູ້ຕົວເລີຍ. ແມ່ນແຕ່ຈົນເຖິງປັດຈຸບັນນີ້ກໍບໍ່ມີຜູ້ຄົນຮັບຮູ້ມັນໄດ້. ບາງເທື່ອ ສິ່ງນີ້ຈະຍັງຄົງເປັນປິດສະໜາຊົ່ວນິດນິລັນ. ການທີ່ພຣະເຈົ້າກາຍມາເປັນເນື້ອໜັງໃນຄັ້ງນີ້ແມ່ນສິ່ງທີ່ບໍ່ມີມະນຸດຄົນໃດສາມາດອາດຮູ້ໄດ້. ບໍ່ວ່າຜົນກະທົບຂອງພາລະກິດຂອງພຣະວິນຍານຈະຍິ່ງໃຫຍ່ ແລະ ມີລິດອຳນາດຫຼາຍສໍ່າໃດ, ພຣະເຈົ້າກໍຍັງເປັນແບບເສີຍເມີຍ, ບໍ່ເປີດເຜີຍຫຍັງອອກມາເລີຍ. ມັນສາມາດເວົ້າໄດ້ວ່າ ຂັ້ນຕອນນີ້ຂອງພາລະກິດຂອງພຣະອົງແມ່ນຄືກັບວ່າ ມັນກຳລັງເກີດຂຶ້ນໃນອານາຈັກສະຫວັນ. ເຖິງແມ່ນມັນຈະຊັດເຈນສຳລັບທຸກຄົນທີ່ມີຕາໃຫ້ເຫັນ ແຕ່ກໍບໍ່ມີຜູ້ໃດສາມາດຮັບຮູ້ມັນໄດ້. ເມື່ອພຣະເຈົ້າສຳເລັດຂັ້ນຕອນນີ້ຂອງພາລະກິດຂອງພຣະອົງ, ມະນຸດຊາດທັງປວງຈະຢຸດເຊົາທ່າທີໂດຍປົກກະຕິຂອງພວກເຂົາ[4] ແລະ ຕື່ນຈາກຄວາມຝັນອັນຍາວນານຂອງພວກເຂົາ. ເຮົາຈື່ພຣະເຈົ້າເຄີຍເວົ້າຄັ້ງໜຶ່ງວ່າ: "ການກາຍມາເປັນເນື້ອໜັງໃນຄັ້ງນີ້ຄືກັບການຕົກຢູ່ໃນຖໍ້າເສືອ". ຄວາມໝາຍຂອງສິ່ງນີ້ກໍຄື ຍ້ອນໃນພາລະກິດຄັ້ງນີ້ຂອງພຣະເຈົ້າ, ພຣະເຈົ້າໄດ້ກາຍມາເປັນເນື້ອໜັງ ແລະ ຍິ່ງໄປກວ່ານັ້ນຄືພຣະອົງເກີດໃນບ່ອນຢູ່ອາໄສຂອງມັງກອນແດງທີ່ຍິ່ງໃຫຍ່, ຍິ່ງໄປກວ່າຄັ້ງກ່ອນ, ພຣະອົງຜະເຊີນກັບອັນຕະລາຍທີ່ຮຸນແຮງຫຼາຍຈາກການທີ່ພຣະອົງມາເທິງແຜ່ນດິນໂລກໃນຄັ້ງນີ້. ສິ່ງທີ່ພຣະອົງໄດ້ຜະເຊີນແມ່ນມີດ, ປືນ, ກະບອງ ແລະ ໄມ້ຄ້ອນ; ສິ່ງທີ່ພຣະອົງຜະເຊີນແມ່ນການລໍ້ລວງ; ສິ່ງທີ່ພຣະອົງຜະເຊີນແມ່ນຝູງຊົນທີ່ສວມໃສ່ໃບໜ້າທີ່ເຕັມໄປດ້ວຍເຈດຕະນາອັນໂຫດຮ້າຍ. ພຣະອົງສ່ຽງທີ່ຈະຖືກຂ້າໄດ້ໃນທຸກຊ່ວງເວລາ. ພຣະເຈົ້າມາໂດຍນຳເອົາຄວາມໂກດຮ້າຍມາພ້ອມກັບພຣະອົງ. ເຖິງຢ່າງໃດກໍຕາມ, ພຣະອົງມາເພື່ອປະຕິບັດພາລະກິດແຫ່ງຄວາມສົມບູນ ເຊິ່ງໝາຍຄວາມວ່າ ພຣະອົງມາເພື່ອປະຕິບັດພາກສ່ວນທີສອງຂອງພາລະກິດຂອງພຣະອົງ ເຊິ່ງສືບຕໍ່ຫຼັງຈາກພາລະກິດແຫ່ງການໄຖ່ບາບ. ເພື່ອເຫັນແກ່ຂັ້ນຕອນນີ້ຂອງພາລະກິດຂອງພຣະອົງ, ພຣະເຈົ້າໄດ້ອຸທິດຄວາມຄິດ ແລະ ຄວາມໃສ່ໃຈທີ່ສຸດ ແລະ ກຳລັງໃຊ້ທຸກວິທີການທີ່ອາດຄິດໄດ້ເພື່ອຫຼີກເວັ້ນການໂຈມຕີຂອງການລໍ້ລວງ, ປົກປິດພຣະອົງເອງຢ່າງຖ່ອມຕົນ ແລະ ບໍ່ອວດອ້າງຕົວຕົນຂອງພຣະອົງຈັກເທື່ອ. ໃນການຊ່ວຍຊີວິດມະນຸດຈາກໄມ້ກາງແຂນ, ພຣະເຢຊູພຽງແຕ່ສຳເລັດພາລະກິດແຫ່ງການໄຖ່ບາບ; ພຣະອົງບໍ່ໄດ້ປະຕິບັດພາລະກິດແຫ່ງຄວາມສົມບູນ. ສະນັ້ນ ມີພຽງເຄິ່ງໜຶ່ງຂອງພາລະກິດຂອງພຣະເຈົ້າທີ່ຖືກເຮັດໃຫ້ສຳເລັດ ແລະ ການສຳເລັດພາລະກິດແຫ່ງການໄຖ່ບາບກໍເປັນພຽງເຄິ່ງໜຶ່ງຂອງແຜນການທັງໝົດຂອງພຣະອົງ. ໃນຂະນະທີ່ຍຸກໃໝ່ກຳລັງຈະເລີ່ມຕົ້ນຂຶ້ນ ແລະ ຍຸກເກົ່າກໍກຳລັງຈະຖອຍລົງ, ພຣະເຈົ້າພຣະບິດາໄດ້ເລີ່ມພິຈາລະນາຢ່າງຮອບຄອບໃນພາກສ່ວນທີສອງຂອງພາລະກິດຂອງພຣະອົງ ແລະ ຫ້າງກະກຽມສຳລັບພາກສ່ວນນັ້ນ. ການບັງເກີດເປັນມະນຸດໃນຍຸກສຸດທ້າຍຄັ້ງນີ້ຊັດເຈນວ່າບໍ່ໄດ້ຖືກທຳນາຍໄວ້ໃນອະດີດ, ສະນັ້ນ

---

4 "ຢຸດເຊົາທ່າທີໂດຍປົກກະຕິຂອງພວກເຂົາ" ໝາຍເຖິງວິທີທີ່ແນວຄິດ ແລະ ມຸມມອງຂອງຜູ້ຄົນກ່ຽວກັບພຣະເຈົ້າໄດ້ປ່ຽນແປງໄປ ຫຼັງຈາກທີ່ພວກເຂົາໄດ້ມາຮູ້ຈັກກັບພຣະເຈົ້າ.

ຈຶ່ງໄດ້ວາງພື້ນຖານສຳລັບຄວາມເລິກລັບຫຼາຍຂຶ້ນອ້ອມຮອບການກາຍມາເປັນເນື້ອໜັງໃນຄັ້ງນີ້ຂອງພຣະເຈົ້າ. ໃນເວລາຮຸ່ງເຊົ້າ, ພຣະເຈົ້າໄດ້ມາເທິງແຜ່ນດິນໂລກ ແລະ ເລີ່ມຕົ້ນຊີວິດຂອງພຣະອົງໃນເນື້ອໜັງ ໂດຍມະນຸດຊາດຈຳນວນຫຼວງຫຼາຍບໍ່ຮູ້ຕົວ. ຜູ້ຄົນບໍ່ຮູ້ການມາເຖິງຂອງຊ່ວງເວລານີ້. ບາງເທື່ອພວກເຂົາທຸກຄົນນອນຫຼັບສະນິດ; ບາງເທື່ອ ຫຼາຍຄົນທີ່ຍັງຕື່ນຕົວເຝົ້າລະວັງກໍກຳລັງຖ້າຢູ່ ແລະບາງເທື່ອ ຫຼາຍຄົນກຳລັງອະທິຖານຢ່າງງຽບໆຫາພຣະເຈົ້າທີ່ຢູ່ໃນສະຫວັນ. ເຖິງຢ່າງໃດກໍຕາມທ່າມກາງຫຼາຍຄົນເຫຼົ່ານີ້ ບໍ່ມີແມ່ນແຕ່ຄົນດຽວ ທີ່ຮູ້ຈັກວ່າພຣະເຈົ້າໄດ້ມາເຖິງແຜ່ນດິນໂລກແລ້ວ. ພຣະເຈົ້າປະຕິບັດພາລະກິດແບບນີ້ ເພື່ອດຳເນີນພາລະກິດຂອງພຣະອົງໃຫ້ລາບລື້ນຂຶ້ນ ແລະ ເພື່ອບັນລຸຜົນຕາມມາທີ່ດີກວ່າ ແລະ ແມ່ນແຕ່ເພື່ອຢັບຢັ້ງການລໍ້ລວງເພີ່ມຂຶ້ນອີກດ້ວຍ. ເມື່ອການນອນຫຼັບໃນລະດູໃບໄມ້ປົ່ງຂອງມະນຸດໄດ້ຈົບສິ້ນລົງ, ພາລະກິດຂອງພຣະເຈົ້າກໍຈະສຳເລັດແຕ່ດົນແລ້ວ ແລະພຣະອົງກໍຈະຈາກໄປ, ນຳເອົາການສິ້ນສຸດມາສູ່ຊີວິດແຫ່ງການທ່ອງໄປມາ ແລະ ການພັກແຮມເທິງແຜ່ນດິນໂລກຂອງພຣະອົງ. ຍ້ອນພາລະກິດຂອງພຣະເຈົ້າໄດ້ຮຽກຮ້ອງໃຫ້ພຣະເຈົ້າປະຕິບັດ ແລະກ່າວໃນບຸກຄົນຂອງພຣະອົງເອງ ແລະ ຍ້ອນບໍ່ມີທາງທີ່ມະນຸດຈະແຊກແຊງໄດ້, ພຣະເຈົ້າຈຶ່ງໄດ້ອົດທົນກັບການທົນທຸກທີ່ຮຸນແຮງເພື່ອປະຕິບັດພາລະກິດດ້ວຍພຣະອົງເອງ. ມະນຸດບໍ່ສາມາດເຮັດແທນພາລະກິດຂອງພຣະເຈົ້າໄດ້. ຍ້ອນເຫດຜົນນີ້ ພຣະເຈົ້າຈຶ່ງໄດ້ຜ່ານຜ່າອັນຕະລາຍຫຼາຍກວ່າຄົນທີ່ຢູ່ໃນລະຫວ່າງຍຸກແຫ່ງພຣະຄຸນເປັນສອງສາມພັນເທົ່າ ເພື່ອລົງມາເທິງດິນແດນມັງກອນແດງທີ່ຍິ່ງໃຫຍ່ອາໄສຢູ່ ເພື່ອປະຕິບັດພາລະກິດຂອງພຣະອົງເອງ, ໃຊ້ຄວາມຄິດ ແລະ ຄວາມຫ່ວງໃຍທັງໝົດຂອງພຣະອົງ ເພື່ອໄຖ່ຜູ້ຄົນທຸກຍາກກຸ່ມນີ້, ຜູ້ຄົນກຸ່ມນີ້ທີ່ຈົມຢູ່ໃນກອງຂີ້ສັດ. ເຖິງແມ່ນບໍ່ມີຜູ້ໃດຮູ້ຈັກເຖິງການເປັນຢູ່ຂອງພຣະເຈົ້າ, ພຣະເຈົ້າກໍບໍ່ໄດ້ວຸ້ນວາຍ, ຍ້ອນສິ່ງນີ້ເປັນປະໂຫຍດຕໍ່ພາລະກິດຂອງພຣະອົງຢ່າງໃຫຍ່ຫຼວງ. ເນື່ອງຈາກທຸກຄົນຊົ່ວຮ້າຍ ແລະ ຊົ່ວຊ້າຢ່າງທີ່ສຸດ, ພວກເຂົາຈະທົນຕໍ່ການເປັນຢູ່ຂອງພຣະເຈົ້າໄດ້ແນວໃດ? ນັ້ນຄືເຫດຜົນທີ່ການມາເທິງແຜ່ນດິນໂລກຈຶ່ງເຮັດໃຫ້ພຣະອົງງຽບ. ບໍ່ວ່າມະນຸດໄດ້ຈົມລົງສູ່ຄວາມໂຫດຮ້າຍຮຸນແຮງທີ່ສຸດກໍຕາມ, ພຣະເຈົ້າກໍບໍ່ໄດ້ເອົາມັນມາໃສ່ໃຈ, ພຽງແຕ່ສືບຕໍ່ປະຕິບັດພາລະກິດທີ່ພຣະອົງຈຳເປັນຕ້ອງເຮັດເພື່ອບັນລຸການຝາກຝັງອັນຍິ່ງໃຫຍ່ກວ່າທີ່ພຣະບິດາໃນສະຫວັນໄດ້ມອບໝາຍໃຫ້ແກ່ພຣະອົງ. ຜູ້ໃດທ່າມກາງພວກເຈົ້າໄດ້ຮັບຮູ້ເຖິງຄວາມເປັນຕາຮັກຂອງພຣະເຈົ້າແດ່? ຜູ້ໃດຄຳນຶງເຖິງພາລະຂອງພຣະເຈົ້າພຣະບິດາຫຼາຍກວ່າພຣະບຸດຂອງພຣະອົງ? ຜູ້ໃດສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າພຣະບິດາ? ພຣະວິນຍານຂອງພຣະເຈົ້າພຣະບິດາໃນສະຫວັນແມ່ນກັງວົນຢູ່ເລື້ອຍໆ ແລະ ພຣະບຸດຂອງພຣະອົງເທິງແຜ່ນດິນໂລກກໍອະທິຖານຢ່າງສະໝໍ່າສະເໝີເພື່ອເຫັນແກ່ຄວາມປະສົງຂອງພຣະເຈົ້າພຣະບິດາ, ກັງວົນຕໍ່ຫົວໃຈຂອງພຣະອົງຈົນເໜືອຄຳບັນຍາຍ. ມີຜູ້ໃດທີ່ຮູ້ຈັກຄວາມຮັກຂອງພຣະເຈົ້າພຣະບິດາທີ່ມີຕໍ່ພຣະບຸດຂອງພຣະອົງບໍ່? ມີຜູ້ໃດທີ່ຮູ້ຈັກຫົວໃຈທີ່ພຣະບຸດອັນເປັນທີ່ຮັກໄດ້ຄິດຮອດພຣະເຈົ້າພຣະບິດາບໍ່? ຖືກແຍກອອກຈາກກັນລະຫວ່າງສະຫວັນ ແລະ ແຜ່ນດິນໂລກ, ທັງສອງກໍໄດ້ແຕ່ຈ້ອງເບິ່ງກັນແລະກັນຈາກທາງໄກຕະຫຼອດເວລາ, ຕິດຕາມກັນແລະກັນໃນພຣະວິນຍານ. ໂອ ມະນຸດຊາດເອີຍ! ເມື່ອໃດເຈົ້າຈຶ່ງຈະຄຳນຶງເຖິງຫົວໃຈຂອງພຣະເຈົ້າ?

ເມື່ອໃດເຈົ້າຈະເຂົ້າໃຈເຈດຕະນາຂອງພຣະເຈົ້າ? ພຣະບິດາ ແລະ ພຣະບຸດເພິ່ງພາກັນຢູ່ສະເໝີ. ແລ້ວເປັນຫຍັງພຣະອົງທັງສອງຈຶ່ງຄວນຖືກແຍກອອກຈາກກັນ, ໂດຍທີ່ພຣະເຈົ້າອົງໜຶ່ງຢູ່ສະຫວັນເບື້ອງເທິງ ແລະ ອີກອົງຢູ່ເທິງແຜ່ນດິນໂລກເບື້ອງລຸ່ມ? ພຣະບິດາຮັກພຣະບຸດຂອງພຣະອົງດັ່ງທີ່ພຣະບຸດຮັກພຣະບິດາຂອງພຣະອົງ. ແລ້ວເປັນຫຍັງພຣະບິດາຈຶ່ງລໍຖ້າດ້ວຍຄວາມປາຖະໜາອັນເລິກເຊິ່ງ ແລະ ເຈັບປວດຫາພຣະບຸດແບບນັ້ນ? ພຣະອົງທັງສອງອາດບໍ່ໄດ້ຖືກແຍກກັນເປັນເວລາດົນ, ແຕ່ຜູ້ໃດຈະຮູ້ວ່າເປັນເວລາເທົ່າໃດມື້ ແລະ ຄືນທີ່ພຣະບິດາໄດ້ໄຝ່ຫາດ້ວຍຄວາມປາຖະໜາອັນເຈັບປວດ ແລະ ດົນປານໃດທີ່ພຣະອົງໄດ້ປາຖະໜາການກັບຄືນຢ່າງໂດຍໄວຂອງພຣະບຸດອັນເປັນທີ່ຮັກຂອງພຣະອົງ? ພຣະອົງສັງເກດເບິ່ງ, ພຣະອົງນັ່ງຢ່າງງຽບໆ ແລະ ພຣະອົງລໍຖ້າ; ບໍ່ມີຫຍັງທີ່ພຣະອົງເຮັດ ໂດຍບໍ່ແມ່ນເພື່ອເຫັນແກ່ການກັບຄືນໂດຍໄວຂອງພຣະບຸດອັນເປັນທີ່ຮັກຂອງພຣະອົງ. ພຣະບຸດໄດ້ພະເນຈອນສຸດຂອບແຜ່ນດິນໂລກ: ເມື່ອໃດພຣະອົງທັງສອງຈະມາຢູ່ຮ່ວມກັນໃໝ່? ເຖິງແມ່ນວ່າ ຫຼັງຈາກທີ່ໄດ້ຢູ່ຮ່ວມກັນໃໝ່ແລ້ວ ພຣະອົງທັງສອງຈະຢູ່ຮ່ວມກັນຕະຫຼອດໄປເປັນນິດ, ພຣະອົງຈະສາມາດອົດທົນຕໍ່ການແຍກຈາກກັນເປັນຫຼາຍພັນມື້ ແລະ ຄືນໄດ້ແນວໃດ ໂດຍທີ່ອົງໜຶ່ງຢູ່ສະຫວັນເບື້ອງເທິງ ແລະ ອີກອົງໜຶ່ງຢູ່ເທິງແຜ່ນດິນໂລກເບື້ອງລຸ່ມ? ຫຼາຍທົດສະວັດເທິງແຜ່ນດິນໂລກຮູ້ສຶກຄືກັບພັນປີໃນສະຫວັນ. ພຣະເຈົ້າພຣະບິດາຈະບໍ່ກັງວົນໄດ້ແນວໃດ? ເມື່ອພຣະເຈົ້າມາເທິງແຜ່ນດິນໂລກ, ພຣະອົງໄດ້ຜະເຊີນກັບການປ່ຽນແປງໃນໂລກມະນຸດຈົນນັບບໍ່ຖ້ວນ ເຊັ່ນດຽວກັບທີ່ມະນຸດໄດ້ຜະເຊີນ. ພຣະເຈົ້າໄຮ້ດຽງສາ, ແລ້ວເປັນຫຍັງພຣະອົງຈຶ່ງຄວນຖືກເຮັດໃຫ້ອົດທົນກັບຄວາມທໍລະມານເຊັ່ນດຽວກັບມະນຸດ? ບໍ່ແປກໃຈເລີຍວ່າເປັນຫຍັງພຣະເຈົ້າພຣະບິດາຈຶ່ງປາຖະໜາຫາພຣະບຸດຂອງພຣະອົງຢ່າງຮີບດ່ວນ; ຜູ້ໃດຈະສາມາດເຂົ້າໃຈຫົວໃຈຂອງພຣະເຈົ້າໄດ້? ພຣະເຈົ້າໄດ້ມອບໃຫ້ແກ່ມະນຸດຫຼາຍເກີນໄປ; ມະນຸດຈະຕອບແທນຫົວໃຈຂອງພຣະເຈົ້າຢ່າງພຽງພໍໄດ້ແນວໃດ? ຢ່າງໃດກໍຕາມ ມະນຸດມອບໃຫ້ແກ່ພຣະເຈົ້າເລັກນ້ອຍເກີນໄປ; ໃນເລື່ອງນີ້ ພຣະເຈົ້າຈະບໍ່ກັງວົນໄດ້ແນວໃດ?

ຫາໄດ້ຍາກທີ່ຈະມີຜູ້ໃດຜູ້ໜຶ່ງທ່າມກາງມະນຸດທີ່ເຂົ້າໃຈສະພາບຄວາມຄິດອັນຮີບດ່ວນຂອງພຣະເຈົ້າ, ຍ້ອນຄວາມສາມາດຂອງມະນຸດແມ່ນນ້ອຍເກີນໄປ ແລະ ຈິດວິນຍານຂອງພວກເຂົາກໍຂ້ອນຂ້າງມືດມົວ ແລະ ດ້ວຍເຫດນັ້ນ ພວກເຂົາທຸກຄົນຈຶ່ງບໍ່ເອົາໃຈໃສ່ ຫຼື ສົນໃຈໃນສິ່ງທີ່ພຣະເຈົ້າກຳລັງເຮັດ. ຍ້ອນເຫດຜົນນີ້, ພຣະເຈົ້າຈຶ່ງກັງວົນກ່ຽວກັບມະນຸດຢູ່ເລື້ອຍໆ, ຄືກັບວ່າທຳມະຊາດອັນຊົ່ວຊ້າຂອງມະນຸດສາມາດລະບາດອອກໄດ້ທຸກຊ່ວງເວລາ. ຈາກສິ່ງນີ້ ຄົນໆໜຶ່ງສາມາດເຫັນໄດ້ຢ່າງຊັດເຈນຍິ່ງຂຶ້ນວ່າ ການທີ່ພຣະເຈົ້າມາເທິງແຜ່ນດິນໂລກແມ່ນຕາມມາດ້ວຍການລໍ້ລວງຢ່າງໃຫຍ່ຫຼວງ. ແຕ່ເພື່ອເຫັນແກ່ການເຮັດໃຫ້ກຸ່ມຄົນໃດໜຶ່ງໄດ້ສົມບູນ, ພຣະເຈົ້າທີ່ເຕັມໄປດ້ວຍສະຫງ່າລາສີຢ່າງສົມບູນໄດ້ບອກມະນຸດເຖິງເຈດຕະນາທຸກຢ່າງຂອງພຣະອົງ, ບໍ່ເຊື່ອງຫຍັງຈາກເຂົາເລີຍ. ພຣະອົງໄດ້ຕັ້ງໃຈຢ່າງເດັດດ່ຽວເພື່ອເຮັດໃຫ້ຜູ້ຄົນກຸ່ມນີ້ບໍລິບູນ ແລະ ດ້ວຍເຫດນັ້ນ ບໍ່ວ່າຈະມີຄວາມລຳບາກ ຫຼື ການລໍ້ລວງໃດກໍຕາມ, ພຣະອົງກໍບໍ່ສົນໃຈ ແລະ ເມີນເສີຍຕໍ່ມັນທັງໝົດ. ພຣະອົງພຽງແຕ່ປະຕິບັດພາລະກິດຂອງພຣະອົງເອງຢ່າງງຽບໆ, ເຊື່ອຢ່າງໜັກແໜ້ນວ່າ ມື້ໜຶ່ງ ເມື່ອພຣະເຈົ້າໄດ້ຄອບຄອງສະຫງ່າລາສີ

ຂອງພຣະອົງ, ມະນຸດກໍຈະຮູ້ຈັກພຣະອົງ ແລະ ເຊື່ອວ່າ ຫຼັງຈາກທີ່ມະນຸດຖືກເຮັດໃຫ້ບໍລິບູນໂດຍພຣະເຈົ້າ, ເຂົາກໍຈະເຂົ້າໃຈຫົວໃຈຂອງພຣະເຈົ້າຢ່າງແທ້ຈິງ. ໃນຕອນນີ້ອາດມີຜູ້ຄົນທີ່ລໍ້ລວງພຣະເຈົ້າ ຫຼື ເຂົ້າໃຈຜິດພຣະເຈົ້າ ຫຼື ກ່າວໂທດພຣະເຈົ້າ; ພຣະເຈົ້າກໍບໍ່ໄດ້ເກັບສິ່ງເຫຼົ່ານີ້ມາໃສ່ໃຈ. ເມື່ອພຣະເຈົ້າລົງມາສູ່ສະຫງ່າລາສີ, ທຸກຄົນກໍຈະເຂົ້າໃຈວ່າ ທຸກສິ່ງທີ່ພຣະເຈົ້າເຮັດແມ່ນເພື່ອຄວາມສຸກຂອງມະນຸດຊາດ ແລະ ພວກເຂົາທຸກຄົນຈະເຂົ້າໃຈວ່າ ທຸກສິ່ງທີ່ພຣະເຈົ້າເຮັດກໍແມ່ນເພື່ອໃຫ້ມະນຸດຊາດໄດ້ເອົາຊີວິດລອດໄດ້ດີຂຶ້ນ. ການມາຂອງພຣະເຈົ້ານໍາມາຍັງການລໍ້ລວງ ແລະ ການມາຂອງພຣະອົງຍັງໄດ້ນໍາມາຄວາມສະຫງ່າຜ່າເຜີຍ ແລະ ຄວາມໂກດຮ້າຍອີກດ້ວຍ. ໃນເວລາທີ່ພຣະເຈົ້າຈາກມະນຸດໄປ, ພຣະອົງກໍໄດ້ຄອບຄອງສະຫງ່າລາສີຂອງພຣະອົງຕັ້ງແຕ່ດົນແລ້ວ ແລະ ພຣະອົງກໍຈາກໄປດ້ວຍສະຫງ່າລາສີຢ່າງສົມບູນ ແລະ ດ້ວຍຄວາມປິຕິຍິນດີທີ່ໄດ້ກັບຄືນໄປ. ພຣະເຈົ້າທີ່ປະຕິບັດພາລະກິດເທິງແຜ່ນດິນໂລກບໍ່ໄດ້ເອົາສິ່ງຕ່າງໆມາໃສ່ໃຈ ບໍ່ວ່າຜູ້ຄົນຈະປະຕິເສດພຣະອົງແນວໃດກໍຕາມ. ພຣະອົງພຽງແຕ່ສືບຕໍ່ປະຕິບັດພາລະກິດຂອງພຣະອົງ. ການສ້າງໂລກຂອງພຣະເຈົ້າຍ້ອນກັບຄືນໄປຫຼາຍພັນປີ. ພຣະອົງໄດ້ມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດຈໍານວນຫຼວງຫຼາຍຈົນນັບບໍ່ຖ້ວນ ແລະ ພຣະອົງໄດ້ຜະເຊີນກັບການປະຕິເສດ ແລະ ການໃສ່ຮ້າຍປ້າຍສີຂອງໂລກມະນຸດຢ່າງເຕັມທີ່. ບໍ່ມີຜູ້ໃດຕ້ອນຮັບການມາເຖິງຂອງພຣະເຈົ້າ; ພຣະອົງຖືກທັກທາຍຢ່າງເຢືອກເຢັນ. ໃນຊ່ວງເວລາສອງສາມພັນປີຂອງການດໍາເນີນຢ່າງຍາກລໍາບາກ, ຄວາມປະພຶດຂອງມະນຸດໄດ້ເຮັດໃຫ້ພຣະເຈົ້າເຈັບປວດຢ່າງໜັກແຕ່ດົນແລ້ວ. ພຣະອົງບໍ່ສົນໃຈຕໍ່ຄວາມກະບົດຂອງຜູ້ຄົນ ແລະ ກົງກັນຂ້າມ ພຣະອົງໄດ້ວາງອີກແຜນການໜຶ່ງເພື່ອປ່ຽນແປງ ແລະ ຊໍາລະມະນຸດໃຫ້ບໍລິສຸດ. ການດູຖູກ, ການໃສ່ຮ້າຍປ້າຍສີ, ການຂົ່ມເຫັງ, ຄວາມລໍາບາກຍາກແຄ້ນ, ການທົນທຸກແຫ່ງການຖືກຄຶງເທິງໄມ້ກາງແຂນ, ການເນລະເທດໂດຍມະນຸດ ແລະ ອື່ນໆອີກ, ເຊິ່ງພຣະເຈົ້າໄດ້ປະສົບພົບພໍ້ຕັ້ງແຕ່ທີ່ກາຍມາເປັນເນື້ອໜັງ: ພຣະເຈົ້າໄດ້ຊີມລົດຊາດສິ່ງເຫຼົ່ານີ້ຈົນພຽງພໍແລ້ວ ແລະ ສໍາລັບຄວາມລໍາບາກໃນໂລກມະນຸດ, ພຣະເຈົ້າທີ່ກາຍມາເປັນເນື້ອໜັງແມ່ນໄດ້ທົນທຸກກັບທຸກສິ່ງເຫຼົ່ານີ້ຢ່າງເຕັມທີ່. ພຣະວິນຍານຂອງພຣະເຈົ້າພຣະບິດາໃນສະຫວັນໄດ້ຄົ້ນພົບຕັ້ງແຕ່ດົນແລ້ວວ່າ ພາບດັ່ງກ່າວແມ່ນບໍ່ສາມາດທົນໄດ້ ແລະ ພຣະອົງແກວ່ງຫົວພ້ອມທັງເລືອກຕາ ລໍຖ້າໃຫ້ພຣະບຸດອັນເປັນທີ່ຮັກຂອງພຣະອົງໄດ້ກັບຄືນມາ. ສິ່ງທີ່ພຣະອົງປາຖະໜາກໍມີພຽງໃຫ້ມະນຸດຊາດຟັງ ແລະ ເຊື່ອຟັງ, ແລະ ສາມາດທີ່ຈະເຊົາກະບົດຕໍ່ພຣະອົງ ໂດຍຮູ້ສຶກອັບອາຍທີ່ສຸດຕໍ່ໜ້າເນື້ອໜັງຂອງພຣະອົງ. ສິ່ງທີ່ພຣະອົງປາຖະໜາກໍມີພຽງແຕ່ໃຫ້ມະນຸດຊາດສາມາດເຊື່ອໃນການເປັນຢູ່ຂອງພຣະເຈົ້າ. ພຣະອົງໄດ້ຢຸດຮຽກຮ້ອງຫຼາຍຢ່າງຈາກມະນຸດຕັ້ງແຕ່ດົນແລ້ວ, ຍ້ອນພຣະເຈົ້າໄດ້ຈ່າຍລາຄາທີ່ແພງຫຼາຍ, ແຕ່ເຖິງຢ່າງນັ້ນ ມະນຸດກໍຍັງພັກຜ່ອນຢ່າງສະບາຍ[5] ແລະ ບໍ່ໃສ່ໃຈພາລະກິດຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ.

5 "ພັກຜ່ອນຢ່າງສະບາຍ" ໝາຍຄວາມວ່າ ຜູ້ຄົນເສີຍເມີຍຕໍ່ພາລະກິດຂອງພຣະເຈົ້າ ແລະ ບໍ່ຖືວ່າພາລະກິດນັ້ນເປັນສິ່ງສໍາຄັນ.

ເຖິງແມ່ນສິ່ງຕ່າງໆທີ່ເຮົາກຳລັງເວົ້າໃນມື້ນີ້ກ່ຽວກັບພາລະກິດຂອງພຣະເຈົ້າອາດມີຫຼາຍຢ່າງທີ່ເປັນ "ຄວາມໄຮ້ສາລະທີ່ບໍ່ສົມເຫດສົມຜົນ"[6] ແຕ່ມັນກໍມີຄວາມຊັດເຈນຢ່າງເລິກເຊິ່ງສຳລັບທາງເຂົ້າຂອງມະນຸດ. ເຮົາພຽງແຕ່ເວົ້າບາງຢ່າງກ່ຽວກັບພາລະກິດ ແລະ ຫຼັງຈາກນັ້ນກໍເວົ້າບາງສິ່ງກ່ຽວກັບທາງເຂົ້າ, ແຕ່ທັງສອງດ້ານແມ່ນຂາດຈາກກັນບໍ່ໄດ້ ແລະ ເມື່ອລວມກັນ ພວກມັນຍິ່ງເປັນປະໂຫຍດຕໍ່ຊີວິດມະນຸດຫຼາຍຂຶ້ນ. ສອງດ້ານເຫຼົ່ານີ້ເຕີມເຕັມກັນ ແລະ ກັນ[7] ແລະ ມີປະໂຫຍດຢ່າງຫຼວງຫຼາຍ, ປ່ອຍໃຫ້ຜູ້ຄົນເຂົ້າໃຈຄວາມປະສົງຂອງພຣະເຈົ້າໄດ້ດີຂຶ້ນ ແລະ ເຮັດໃຫ້ສາມາດມີການສື່ສານລະຫວ່າງຜູ້ຄົນ ແລະ ພຣະເຈົ້າ. ຜ່ານການສົນທະນາກ່ຽວກັບພາລະກິດໃນມື້ນີ້, ຄວາມສຳພັນຂອງມະນຸດຊາດກັບພຣະເຈົ້າແມ່ນຖືກປັບປຸງເພີ່ມຂຶ້ນ, ມີຄວາມເຂົ້າໃຈຮ່ວມກັນເລິກເຊິ່ງຂຶ້ນ ແລະ ມະນຸດສາມາດຄຳນຶງ ແລະ ສົນໃຈໃນພາລະຂອງພຣະເຈົ້າຫຼາຍຍິ່ງຂຶ້ນ; ມະນຸດຖືກເຮັດໃຫ້ຮູ້ສຶກໃນສິ່ງທີ່ພຣະເຈົ້າໄດ້ຮູ້ສຶກ, ໝັ້ນໃຈຍິ່ງຂຶ້ນວ່າພວກເຂົາຈະຖືກປ່ຽນແປງໂດຍພຣະເຈົ້າ ແລະ ລໍຖ້າການປາກົດອີກຄັ້ງຂອງພຣະເຈົ້າ. ນີ້ຄືສິ່ງດຽວທີ່ພຣະເຈົ້າໄດ້ຮຽກຮ້ອງຈາກມະນຸດໃນປັດຈຸບັນ, ນັ້ນກໍຄື ເພື່ອດຳລົງຊີວິດຕາມລັກສະນະຂອງຜູ້ທີ່ຮັກພຣະເຈົ້າ, ເຮັດແບບນັ້ນເພື່ອວ່າ ແສງສະຫວ່າງຂອງຜະລຶກແຫ່ງສະຕິປັນຍາຂອງພຣະເຈົ້າຈະສິ່ງແສງແວວວາວໃນຍຸກແຫ່ງຄວາມມືດມົວ ແລະ ເພື່ອວ່າການດຳລົງຊີວິດຂອງມະນຸດອາດຈະສ້າງບົດແສງສະຫວ່າງໃນພາລະກິດຂອງພຣະເຈົ້າໄວ້ ແລະ ສ່ອງແສງຕະຫຼອດໄປໃນທິດຕາເວັນອອກຂອງແຜ່ນດິນໂລກ, ບັນຊາຄວາມສົນໃຈຂອງໂລກ ແລະ ການຍ້ອງຍໍສັນລະເສີນຂອງທຸກຄົນ. ແນ່ນອນທີ່ສຸດ ສິ່ງນີ້ແມ່ນທາງເຂົ້າທີ່ດີກວ່າສຳລັບຄົນໃນຍຸກປັດຈຸບັນຜູ້ທີ່ຮັກພຣະເຈົ້າ.

6 "ຄວາມໄຮ້ສາລະທີ່ບໍ່ສົມເຫດສົມຜົນ" ໝາຍຄວາມວ່າ ໂດຍພື້ນຖານແລ້ວ ຜູ້ຄົນບໍ່ສາມາດຄົ້ນພົບພື້ນຖານຂອງພຣະທຳທີ່ພຣະເຈົ້າກ່າວ ແລະ ບໍ່ຮູ້ຫຍັງກ່ຽວກັບສິ່ງທີ່ພຣະເຈົ້າກຳລັງເວົ້າ. ວະລີນີ້ແມ່ນໃຊ້ເພື່ອເວົ້າເຍາະເຍີ້ຍ.

7 "ເຕີມເຕັມກັນ ແລະ ກັນ" ໝາຍຄວາມວ່າ ການລວມທັງ "ພາລະກິດ" ແລະ "ທາງເຂົ້າ" ໃນການສົນທະນາຈະຍິ່ງເປັນປະໂຫຍດສຳລັບຄວາມຮູ້ຂອງພວກເຮົາກ່ຽວກັບພຣະເຈົ້າ.

# ພາລະກິດ ແລະ ທາງເຂົ້າ (5)

ໃນມື້ນີ້ ພວກເຈົ້າທຸກຄົນໄດ້ຮູ້ວ່າ ພຣະເຈົ້າກຳລັງນຳພາຜູ້ຄົນເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງຊີວິດ, ພຣະອົງກຳລັງນຳພາມະນຸດເພື່ອຍ່າງໃນບາດກ້າວຕໍ່ໄປຂອງອີກຍຸກ, ພຣະອົງກຳລັງນຳພາມະນຸດໃຫ້ຢູ່ເໜືອຍຸກເດີມທີ່ມືດມົວນີ້, ອອກຈາກເນື້ອໜັງ, ອອກຈາກການກົດຂີ່ຂົ່ມເຫັງຂອງກອງກຳລັງແຫ່ງຄວາມມືດ ແລະ ອິດທິພົນຂອງຊາຕານ ເພື່ອວ່າທຸກຄົນຈະສາມາດດຳລົງຊີວິດຢູ່ໃນໂລກແຫ່ງອິດສະຫຼະພາບ. ເພື່ອມື້ອື່ນທີ່ສວຍງາມ ແລະ ເພື່ອວ່າຜູ້ຄົນຈະກ້າຫານຫຼາຍຂຶ້ນໃນບາດກ້າວຂອງພວກເຂົາໃນມື້ອື່ນ, ພຣະວິນຍານບໍລິສຸດຈຶ່ງໄດ້ວາງແຜນທຸກຢ່າງສຳລັບມະນຸດ ແລະ ເພື່ອທີ່ມະນຸດຈະສາມາດຮັບຄວາມສຸກທີ່ຍິ່ງໃຫຍ່ຂຶ້ນ, ພຣະເຈົ້າໄດ້ອຸທິດຄວາມພະຍາຍາມທັງໝົດຂອງພຣະອົງໃນເນື້ອໜັງເພື່ອຈັດກຽມເສັ້ນທາງຢູ່ເບື້ອງໜ້າສຳລັບມະນຸດ ແລະ ຮີບເລັ່ງການມາເຖິງຂອງມື້ທີ່ມະນຸດປາຖະໜາຫາ. ພວກເຈົ້າທຸກຄົນກໍຊື່ນຊົມຊ່ວງເວລາທີ່ສວຍງາມນີ້; ມັນບໍ່ແມ່ນຄວາມສຳເລັດທີ່ໄດ້ມາງ່າຍໆເພື່ອທີ່ຈະມາຢູ່ຮ່ວມກັບພຣະເຈົ້າ. ເຖິງວ່າພວກເຈົ້າບໍ່ເຄີຍຮູ້ຈັກພຣະອົງ, ພວກເຈົ້າກໍໄດ້ຢູ່ກັບພຣະອົງຕັ້ງແຕ່ດົນແລ້ວ. ຖ້າພຽງແຕ່ທຸກຄົນສາມາດຈື່ມື້ທີ່ສວຍງາມແຕ່ຊົ່ວຄາວເຫຼົ່ານີ້ຕະຫຼອດໄປ ແລະ ເຮັດໃຫ້ພວກມັນເປັນຊັບສິນທີ່ຖືກຖະໜອມຂອງພວກເຂົາເທິງແຜ່ນດິນໂລກ. ພາລະກິດຂອງພຣະເຈົ້າຖືກເປີດເຜີຍຕໍ່ມະນຸດຕັ້ງແຕ່ດົນແລ້ວ ແຕ່ຍ້ອນຫົວໃຈຂອງຜູ້ຄົນສັບສົນເກີນໄປ ແລະ ຍ້ອນພວກເຂົາບໍ່ສົນໃຈມັນເລີຍ, ພາລະກິດຂອງພຣະເຈົ້າຈຶ່ງຍັງຄົງຄ້າງຢູ່ໃນພື້ນຖານເດີມຂອງມັນ. ເບິ່ງຄືວ່າ ຄວາມຄິດ, ແນວຄິດ ແລະ ທັດສະນະທາງຈິດໃຈຂອງພວກເຂົາ ຍັງຄົງຫຼ້າຫຼັງຫຼາຍ ຈົນທັດສະນະທາງຈິດໃຈຂອງພວກເຂົາຫຼາຍຄົນຄ້າຍຄືກັບຄົນສະໄໝດຶກດຳບັນໃນເວລາບູຮານ ແລະ ບໍ່ປ່ຽນແປງແມ່ນແຕ່ໜ້ອຍດຽວ. ຜົນຕາມມາກໍຄື ຜູ້ຄົນຍັງມຶນງົງ ແລະ ບໍ່ຊັດເຈນກ່ຽວກັບພາລະກິດທີ່ພຣະເຈົ້າປະຕິບັດ. ພວກເຂົາຍິ່ງບໍ່ຊັດເຈນກ່ຽວກັບສິ່ງທີ່ພວກເຂົາເຮັດ ແລະ ສິ່ງທີ່ພວກເຂົາຄວນເຂົ້າສູ່. ສິ່ງເຫຼົ່ານີ້ນຳສະເໜີເຊິ່ງຄວາມຫຍຸ້ງຍາກຢ່າງຫຼວງຫຼາຍຕໍ່ພາລະກິດຂອງພຣະເຈົ້າ ແລະ ຂັດຂວາງບໍ່ໃຫ້ຊີວິດຂອງຜູ້ຄົນຂັບເຄື່ອນໄປຂ້າງໜ້າ. ຍ້ອນທາດແທ້ຂອງມະນຸດ ແລະ ຄວາມສາມາດຂອງພວກເຂົາ, ໂດຍພື້ນຖານແລ້ວ ພວກເຂົາຈຶ່ງບໍ່ສາມາດເຂົ້າໃຈພາລະກິດຂອງພຣະເຈົ້າ ແລະ ບໍ່ເຄີຍປະຕິບັດຕໍ່ສິ່ງເຫຼົ່ານີ້ວ່າເປັນສິ່ງສຳຄັນ. ຖ້າພວກເຈົ້າປາຖະໜາທີ່ຈະຄືບໜ້າໃນຊີວິດຂອງພວກເຈົ້າ, ພວກເຈົ້າຕ້ອງເລີ່ມຕົ້ນໃສ່ໃຈລາຍລະອຽດຂອງການເປັນຢູ່ຂອງພວກເຈົ້າ, ເຂົ້າໃຈທຸກລາຍລະອຽດເພື່ອຄວບຄຸມທາງເຂົ້າສູ່ຊີວິດຂອງພວກເຈົ້າ ໂດຍປ່ຽນແປງຫົວໃຈຂອງພວກເຈົ້າທຸກໆຄົນຢ່າງທົ່ວເຖິງ ແລະ ແກ້ໄຂບັນຫາແຫ່ງຄວາມວ່າງເປົ່າທີ່ຢູ່ພາຍໃນຫົວໃຈຂອງພວກເຈົ້າ ແລະ ການເປັນຢູ່ທີ່ຈືດຈາງ ແລະ ເສົ້າໝອງທີ່ເຮັດໃຫ້ພວກເຈົ້າເຈັບປວດ ເພື່ອວ່າພວກເຈົ້າແຕ່ລະຄົນຈະຖືກເຮັດໃຫ້ເລີ່ມຕົ້ນໃໝ່ຈາກພາຍໃນສູ່ພາຍນອກ ແລະ ໄດ້ຮັບຊີວິດທີ່ຍົກສູງຂຶ້ນ, ຍອດຢ້ຽມ ແລະ ເປັນອິດສະຫຼະຢ່າງແທ້ຈິງ. ເປົ້າໝາຍກໍຄື ພວກເຈົ້າແຕ່ລະຄົນຈະສາມາດມາມີຊີວິດຢູ່, ຖືກເຮັດຟື້ນຄືນໃນວິນຍານຂອງພວກເຈົ້າ ແລະ ມາຄອບຄອງລັກສະນະຂອງສິ່ງທີ່ມີຊີວິດ. ໃນບັນດາອ້າຍເອື້ອຍນ້ອງທັງໝົດທີ່ພວກເຈົ້າພົວພັນນຳ,

ຫາໄດ້ຍາກທີ່ຈະມີຜູ້ໃດຜູ້ໜຶ່ງທີ່ມີຊີວິດຊີວາ ແລະ ສົດຊື່ນ. ພວກເຂົາທຸກຄົນເປັນຄືກັບທະນີຄົນບູຮານ, ດ້ອຍປັນຍາ ແລະ ໂງ່ຈ້າ, ປາສະຈາກຄວາມຫວັງເພື່ອການພັດທະນາຢ່າງຊັດເຈນ. ທີ່ຮ້າຍແຮງກວ່ານັ້ນ, ອ້າຍເອື້ອຍນ້ອງທີ່ເຮົາພົບພັນນຳແມ່ນຫຍາບຄາຍ ແລະ ປ່າເຖື່ອນຄືກັບຄົນປ່າໃນພູເຂົາ. ພວກເຂົາເກືອບຈະບໍ່ຮູ້ຈັກຫຍັງເລີຍກ່ຽວກັບມາລະຍາດ ແລ້ວແຮງໄກທີ່ຈະຮູ້ກ່ຽວກັບພື້ນຖານຂອງວິທີການປະພຶດຕົວ. ຫຼາຍຄົນເປັນນ້ອງສາວ ເຊິ່ງເຖິງແມ່ນວ່າພວກເຂົາຈະເບິ່ງຄືສະຫຼາດ ແລະ ເປັນຕານັບຖື ແລະ ເຕີບໃຫຍ່ງົດງາມຄືກັບດອກໄມ້ ແຕ່ພວກເຂົາກໍຍັງປະພຶດຕົນໃນລັກສະນະ "ອີກທາງໜຶ່ງ". ຜົມຂອງເອື້ອຍນ້ອງຄົນໜຶ່ງ[ກ] ແມ່ນປົດບັງໃບໜ້າທັງໝົດຂອງນາງ ເຊິ່ງເຮັດໃຫ້ບໍ່ເຫັນຕາຂອງນາງໄດ້ເລີຍ. ເຖິງແມ່ນວ່າລັກສະນະໃບໜ້າຂອງນາງສະອາດ ແລະ ດີງາມ, ຊົງຜົມຂອງນາງກໍເປັນຕາລັງກຽດເຊິ່ງເຮັດໃຫ້ຄົນໜຶ່ງຮູ້ສຶກແປກປະຫຼາດ ຄືກັບວ່ານາງເປັນຜູ້ກະທຳຜິດໝາຍເລກໜຶ່ງໃນສູນກັກກັນເຢົາວະຊົນ. ຕາຂອງນາງທີ່ແຈ້ງ ແລະ ໃສຄືກັບມໍລະກົດໃນນ້ຳແມ່ນຖືກລົບລ້າງກັນໂດຍການນຸ່ງຖືແລະ ຊົງຜົມຂອງນາງ ເຊິ່ງເຮັດໃຫ້ພວກມັນເບິ່ງຄືກັບໂຄມໄຟຄູ່ໜຶ່ງ ທີ່ພົບເຫັນຢ່າງກະທັນຫັນໃນກາງຄືນທີ່ມືດສະໜິດ ທີ່ສົ່ງແສງແມບຢ່າງເປັນໄລຍະດ້ວຍຄວາມເຫຼື້ອມທີ່ເຮັດໃຫ້ບໍ່ເຫັນຮຸ່ງ ເຊິ່ງເຮັດໃຫ້ເກີດຄວາມຢ້ານກົວໃນຫົວໃຈຂອງມະນຸດ ແລະ ເຖິງຢ່າງໃດກໍຕາມມັນຍັງປາກົດຄືກັບວ່ານາງຕັ້ງໃຈລີ້ຈາກຜູ້ໃດຜູ້ໜຶ່ງ. ເມື່ອເຮົາພົບນາງ, ນາງກໍຄິດຫາວິທີເພື່ອໜີໄປຈາກ "ສາກ" ຄືກັບຄາດຕະກອນທີ່ຫາກໍຂ້າຜູ້ໃດຜູ້ໜຶ່ງ ແລະ ຫຼົບຫຼີກຢູ່ເລື້ອຍໆ ໂດຍຢ້ານທີ່ຈະຖືກຄົ້ນພົບ; ດ້ວຍເຫດນັ້ນ ນາງຈຶ່ງເປັນຄືກັບຄົນອາຟຣິກາຜິວດຳ[1] ທີ່ເປັນຂ້າທາດຫຼາຍຮຸ່ນ ແລະ ບໍ່ສາມາດເງີຍຫົວຂອງພວກເຂົາຕໍ່ໜ້າຄົນອື່ນຈັກເທື່ອ. ຮູບແບບຂອງພຶດຕິກຳນີ້ ຈົນໄປເຖິງວິທີທີ່ຜູ້ຄົນແຕ່ງຕົວ ແລະ ຕົບແຕ່ງຕົນເອງ ແມ່ນຈະໃຊ້ເວລາສອງສາມເດືອນເພື່ອປັບປຸງ.

ເປັນເວລາຫຼາຍພັນປີ, ຄົນຈີນໄດ້ມີຊີວິດແບບຂ້າທາດ ແລະ ສິ່ງນີ້ໄດ້ຈຳກັດຄວາມຄິດ, ແນວຄິດ, ຊີວິດ, ພາສາ, ພຶດຕິກຳ ແລະ ການກະທຳຂອງພວກເຂົາຈົນພວກເຂົາບໍ່ຖືກປ່ອຍໃຫ້ມີອິດສະຫຼະພາບແມ່ນແຕ່ໜ້ອຍດຽວ. ປະຫວັດສາດສອງສາມພັນປີໄດ້ຈັບຜູ້ຄົນທີ່ສຳຄັນທີ່ມີວິນຍານ ແລະ ກັດເຊາະພວກເຂົາໃຫ້ກາຍເປັນສິ່ງທີ່ຄ້າຍຄືກັບຊາກສົບທີ່ປາສະຈາກວິນຍານ. ມີຫຼາຍຄົນທີ່ດຳລົງຊີວິດຢູ່ພາຍໃຕ້ມີດແຫ່ງຊາຕານຂອງຄົນຂາຍຊີ້ນ, ມີຫຼາຍຄົນທີ່ດຳລົງຊີວິດຢູ່ໃນເຮືອນຄືກັບຖ້ຳສັດຮ້າຍ, ມີຫຼາຍຄົນທີ່ກິນອາຫານແບບດຽວກັນກັບງົວ ຫຼື ມ້າ ແລະ ມີຫຼາຍຄົນທີ່ເວົ້າຕົວະ, ໄຮ້ຄວາມຮູ້ສຶກ ແລະ ຢູ່ໃນຄວາມສັບສົນໃນ "ໂລກເບື້ອງລຸ່ມ". ໃນລັກສະນະພາຍນອກ, ຜູ້ຄົນບໍ່ໄດ້ແຕກຕ່າງໄປຈາກມະນຸດດຶກດຳບັນ, ສະຖານທີ່ພັກຜ່ອນຂອງພວກເຂົາເປັນຄືກັບນະຣົກ ແລະ ສຳລັບເພື່ອນແລ້ວ ພວກເຂົາແມ່ນຖືກອ້ອມຮອບໄປດ້ວຍຜີຮ້າຍທີ່ສົກກະປົກ ແລະ ວິນຍານຊົ່ວຮ້າຍທຸກຮູບແບບ. ໃນພາຍນອກ, ມະນຸດປາກົດວ່າເປັນ "ສັດ" ທີ່ສູງສົ່ງກວ່າ; ໃນຄວາມເປັນຈິງ ພວກເຂົາດຳລົງຊີວິດ ແລະ ອາໄສຢູ່ກັບ

---

ກ ຂໍ້ຄວາມຕົ້ນສະບັບອ່ານວ່າ "ຂອງນາງ".

1 "ຄົນອາຟຣິກາຜິວດຳ" ໝາຍເຖິງຄົນຜິວດຳທີ່ຖືກສາບແຊ່ງໂດຍພຣະເຈົ້າ ເຊິ່ງແມ່ນຜູ້ທີ່ເປັນຂ້າທາດເປັນເວລາຫຼາຍຮຸ່ນ.

ຜີຮ້າຍທີ່ສົກກະປົກ. ຜູ້ຄົນດຳລົງຊີວິດຢູ່ໃນການລັດໂຈມຕີຂອງຊາຕານ ແລະ ຖືກຈັບໃນການລາກແກ່ຂອງມັນໂດຍບໍ່ມີທາງຫຼົບໜີໄດ້ ໂດຍບໍ່ມີຜູ້ໃດເບິ່ງແຍງພວກເຂົາ. ແທນທີ່ຈະເວົ້າວ່າ ພວກເຂົາເຕົ້າໂຮມກັບຜູ້ເປັນທີ່ຮັກຂອງພວກເຂົາໃນເຮືອນທີ່ສະບາຍ, ດຳລົງຊີວິດຢ່າງມີຄວາມສຸກ ແລະ ເປັນທີ່ພໍໃຈ, ຄົນໆໜຶ່ງຄວນເວົ້າວ່າ ມະນຸດດຳລົງຊີວິດຢູ່ໃນດິນແດນມໍລະນາ, ຈັດການກັບຜີຮ້າຍ ແລະ ພົວພັນກັບຜີສາດຮ້າຍ. ໃນຄວາມເປັນຈິງແລ້ວ ຜູ້ຄົນຍັງຖືກຜູກມັດໂດຍຊາຕານ, ພວກເຂົາດຳລົງຊີວິດໃນບ່ອນທີ່ຜີຮ້າຍທີ່ສົກກະປົກເຕົ້າໂຮມກັນ ແລະ ພວກເຂົາຖືກຈັດການໂດຍຜີຮ້າຍທີ່ສົກກະປົກເຫຼົ່ານີ້ ຄືກັບວ່າຕຽງຂອງພວກເຂົາເປັນບ່ອນເພື່ອໃຫ້ຊາກສົບຂອງພວກເຂົາໄດ້ນອນຫຼັບ ຄືກັບວ່າພວກມັນເປັນຮັງທີ່ສະບາຍ. ໃນການເຂົ້າສູ່ເຮືອນຂອງພວກເຂົາ, ເດີ່ນແມ່ນເຢັນ ແລະ ໂດດດ່ຽວ, ລົມໜາວເຢັນໆໄດ້ພັດຜ່ານງ່າໄມ້ແຫ້ງ. ເມື່ອເປີດປະຕູສູ່ "ພື້ນທີ່ອາໄສ", ຫ້ອງດັ່ງກ່າວແມ່ນມືດສະໜິດ ໂດຍທີ່ເຈົ້າສາມາດເດມືຂອງເຈົ້າອອກ ແລະ ບໍ່ເຫັນນິ້ວມືຂອງເຈົ້າ. ແສງສະຫວ່າງເລັກນ້ອຍໄດ້ສ່ອງເຂົ້າມາຜ່ານຮອຍແຕກໃນປະຕູ ເຊິ່ງເຮັດໃຫ້ຫ້ອງດັ່ງກ່າວຮູ້ສຶກເສົ້າໝອງ ແລະ ເປັນຕາຢ້ານຍິ່ງຂຶ້ນ. ບາງຄັ້ງບາງຄາວ, ໜູໄດ້ສົ່ງສຽງຮ້ອງອິດໆທີ່ແປກປະຫຼາດ ຄືກັບວ່າກຳລັງລ່າເລີງ. ທຸກສິ່ງທີ່ຢູ່ໃນຫ້ອງນັ້ນແມ່ນເປັນຕາລັງກຽດ ແລະ ເປັນຕາຢ້ານ ຄືກັບເຮືອນທີ່ເຄີຍຖືກຢູ່ອາໄສໂດຍຜູ້ໃດຜູ້ໜຶ່ງທີ່ຫາກໍຖືກວາງໃສ່ຫີບສົບ. ຕຽງ, ຜ້ານວມປົກຕຽງ ແລະ ຕູ້ນ້ອຍໆທີ່ບໍ່ໄດ້ໂດດເດັ່ນໃນຫ້ອງແມ່ນລ້ວນແລ້ວແຕ່ຖືກປົກຄຸມດ້ວຍຂີ້ຝຸ່ນ, ເທິງພື້ນແມ່ນມີນົກຕໍ່ນ້ອຍໆສອງສາມໂຕທີ່ເຜີຍແຂ້ວຂອງພວກມັນ ແລະ ແກວ່ງເລັບຂອງພວກມັນ ແລະ ໄຍແມງມຸມກໍແຂວນຢູ່ຝາ. ກະຈົກຕັ້ງຢູ່ເທິງໂຕະ, ມີຫວີໄມ້ຢູ່ຂ້າງໆມັນ. ເມື່ອກຳລັງຍ່າງໄປຫາກະຈົກ, ເຈົ້າກໍຈັບທຽນໄຂ ແລະ ໄຕ້ມັນ. ເຈົ້າກໍເຫັນວ່າກະຈົກນັ້ນຖືກປົກຄຸມດ້ວຍຂີ້ຝຸ່ນ ເຊິ່ງເຮັດໃຫ້ເກີດ "ເຄື່ອງແຕ່ງໜ້າ" ປະເພດໃດໜຶ່ງໃນພາບສະທ້ອນຂອງຜູ້ຄົນ[໒] ຈົນພວກເຂົາເບິ່ງຄືກັບວ່າພວກເຂົາຫາກໍອອກຈາກຂຸມຝັງສົບ. ຫວີແມ່ນເຕັມໄປດ້ວຍຜົມ. ທຸກສິ່ງເຫຼົ່ານີ້ແມ່ນເກົ່າ ແລະ ຫຍາບ ແລະ ເບິ່ງຄືກັບວ່າພວກມັນຫາກໍຖືກໃຊ້ໂດຍຜູ້ໃດຜູ້ໜຶ່ງທີ່ຫາກໍຕາຍ. ເມື່ອຫຼຽວເບິ່ງຫວີ, ຄົນໆໜຶ່ງກໍຮູ້ສຶກຄືກັບວ່າອາດມີຊາກສົບທີ່ນອນຢູ່ຂ້າງໆ. ຜົມທີ່ຢູ່ໃນຫວີມີກິ່ນຂອງຄົນຕາຍອ້ອມໆພວກມັນ ໂດຍບໍ່ມີເລືອດໄຫຼວຽນໃນພວກມັນ. ລົມເຢັນເຂົ້າຜ່ານຮອຍແຕກໃນປະຕູ ຄືກັບວ່າຜີກຳລັງບຽດເຂົ້າຜ່ານຮອຍແຕກ ເພື່ອກັບຄືນມາເພື່ອອາໄສຢູ່ໃນຫ້ອງ. ມີຄວາມໜາວເຢັນທີ່ຮ້ອນອົບເອົ້າທົ່ວຫ້ອງ ແລະ ທັນໃດນັ້ນກໍມີກິ່ນເໝັນຄືກັບຊາກສົບທີ່ກຳລັງເນົ່າເປື່ອຍ ແລະ ໃນຊ່ວງເວລານີ້ ສາມາດເຫັນໄດ້ວ່າມີເຄື່ອງຂອງຕ່າງໆປົນກັນຢ່າງບໍ່ເປັນລະບຽບທີ່ຫ້ອຍອ້ອມຝາ, ຢູ່ເທິງຕຽງແມ່ນມີເຄື່ອງນອນທີ່ຫຍັບຫຍໍ່, ສົກກະປົກ ແລະ ມີກິ່ນເໝັນ, ມີເມັດເຂົ້າຢູ່ໃນມຸມ, ຕູ້ແມ່ນຖືກປົກຄຸມດ້ວຍຂີ້ຝຸ່ນ, ພື້ນແມ່ນຖືກປົກຄຸມດ້ວຍກິ່ງໄມ້ນ້ອຍໆ ແລະ ດິນ ແລະ ອື່ນໆ ຄືກັບວ່າພວກມັນຫາກໍຖືກໃຊ້ໂດຍຄົນຕາຍ ທີ່ໂຊເຊໄປຂ້າງໜ້າ, ກັດແຂ້ວຂອງພວກເຂົາ ແລະ ຈັບດຶງອາກາດ. ມັນພຽງພໍທີ່ຈະເຮັດໃຫ້ເຈົ້າສັ່ນໜາວ. ບໍ່ມີຮ່ອງຮອຍຂອງຊີວິດຢູ່ບ່ອນໃດເລີຍໃນຫ້ອງ,

---

໒ ຂໍ້ຄວາມຕົ້ນສະບັບອ່ານວ່າ "ໃບໜ້າຂອງຜູ້ຄົນ".

ທຸກສິ່ງມືດ ແລະ ຊຸ່ມປຽກ, ຄືກັບດິນແດນມໍລະນາ ແລະ ນະຮົກທີ່ພຣະເຈົ້າໄດ້ກ່າວເຖິງ. ນີ້ເປັນຄືກັບຂຸມຝັງສົບຂອງມະນຸດແທ້ໆ ທີ່ມີຕູ້ເຊິ່ງບໍ່ໄດ້ທາສີ, ຕັ່ງວາງຂາ, ວົງກົບປ່ອງຢ້ຽມ ແລະ ປະຕູທີ່ຖືກປົກຄຸມດ້ວຍເສື້ອຜ້າໄວ້ອາໄລ ແລະ ສະແດງຄວາມເຄົາລົບນັບຖືຄົນຕາຍຢ່າງງຽບໆ. ມະນຸດໄດ້ດຳລົງຊີວິດໃນໂລກເບື້ອງລຸ່ມນີ້ເປັນເວລາຫຼາຍທົດສະວັດ ຫຼື ສອງສາມສັດຕະວັດ ຫຼື ແມ່ນແຕ່ສອງສາມພັນປີໂດຍທີ່ອອກໄປໄວ ແລະ ກັບຄືນຊ້າ. ພວກເຂົາປາກົດອອກຈາກ “ຂຸມຝັງສົບ” ຂອງພວກເຂົາໃນແສງສະຫວ່າງທຳອິດເມື່ອໄກ່ໂຕຜູ້ກຳລັງຂັນ ແລະ ເມື່ອຫຼຽວເບິ່ງທ້ອງຟ້າ ແລະ ເສືອດຕາເບິ່ງພື້ນດິນ, ພວກເຂົາກໍເລີ່ມກິດຈະກຳຂອງມື້ຂອງພວກເຂົາ. ເມື່ອຕາເວັນຕົກລົງຫຼັງພູເຂົາ, ພວກເຂົາກໍລາກຮ່າງກາຍທີ່ອິດເມື່ອຍຂອງພວກເຂົາກັບຄືນສູ່ “ຂຸມຝັງສົບ”; ໃນເວລາທີ່ພວກເຂົາໄດ້ກິນອີ່ມທ້ອງຂອງພວກເຂົານັ້ນ, ມັນກໍເປັນເວລາຕາເວັນຕົກແລ້ວ. ແລ້ວເມື່ອໄດ້ສຳເລັດການກະກຽມຂອງພວກເຂົາເພື່ອອອກຈາກ “ຂຸມຝັງສົບ” ອີກຄັ້ງໃນມື້ຖັດມາ, ພວກເຂົາກໍມອດແສງໄຟ ເຊິ່ງເບິ່ງຄືຈະເປັ່ງແສງໄຟເຮືອງແສງ. ໃນເວລານີ້, ສິ່ງທີ່ສາມາດເຫັນໄດ້ພາຍໃຕ້ແສງເດືອນກໍມີພຽງກອງດິນຂຸມຝັງສົບ ທີ່ແຜ່ຂະຫຍາຍຄືກັບພູນ້ອຍໄປສູ່ທຸກມຸມ. ຈາກພາຍໃນ, “ຂຸມຝັງສົບ” ໄດ້ມີສຽງໂກນດັງອອກມາບາງຄັ້ງບາງຄາວ, ຂຶ້ນໆ ແລະ ລົງໆ. ທຸກຄົນນອນຫຼັບເລິກ ແລະ ຜີຮ້າຍທີ່ສົກກະປົກ ແລະ ຜີທຸກຕົນກໍເບິ່ງຄືກັບກຳລັງພັກຜ່ອນຢ່າງສະຫງົບສຸກເຊັ່ນກັນ. ເປັນຄັ້ງບາງຄາວ, ຄົນໆໜຶ່ງຈະໄດ້ຍິນສຽງກາຮ້ອງຈາກໄກໆ, ສຽງຮ້ອງໄຫ້ທີ່ເປົ່າປ່ຽວເຫຼົ່ານີ້ເຊິ່ງຢູ່ໃນຄືນທີ່ມືດ ແລະ ງຽບເຊັ່ນນີ້ແມ່ນພຽງພໍທີ່ຈະເຮັດໃຫ້ເຈົ້າສັ່ນຢ້ານຈົນຮອດກະດູກສັນຫຼັງ ແລະ ເຮັດໃຫ້ຜົມຂອງເຈົ້າລຸກຂຶ້ນ... ຜູ້ໃດຈະຮູ້ຈັກວ່າມະນຸດໄດ້ໃຊ້ເວລາເທົ່າໃດປີໃນສະພາບແວດລ້ອມດັ່ງກ່າວ, ຕາຍ ແລະ ເກີດໃໝ່; ຜູ້ໃດຈະຮູ້ຈັກວ່າພວກເຂົາຄົງຢູ່ໃນໂລກມະນຸດດົນປານໃດ ເຊິ່ງເປັນບ່ອນທີ່ຜູ້ຄົນ ແລະ ຜີປະປົນກັນ ແລະ ຍິ່ງໄປກວ່ານັ້ນ ຜູ້ໃດຈະຮູ້ຈັກວ່າພວກເຂົາໄດ້ກ່າວລາໂລກເປັນເວລາເທົ່າໃດຄັ້ງ. ໃນນະຮົກທີ່ຢູ່ເທິງແຜ່ນດິນໂລກນີ້ ມະນຸດໄດ້ດຳລົງຊີວິດທີ່ມີຄວາມສຸກ ຄືກັບພວກເຂົາບໍ່ມີຄຳຕໍ່ວ່າແມ່ນແຕ່ໜ້ອຍດຽວ ຍ້ອນພວກເຂົາເລີ່ມລຶ້ງເຄີຍກັບຊີວິດໃນດິນແດນມໍລະນາຕັ້ງແຕ່ດົນ. ແລ້ວດ້ວຍເຫດນັ້ນ ຜູ້ຄົນກໍຫຼົງໄຫຼກັບສະຖານທີ່ນີ້ທີ່ຜີຮ້າຍສົກກະປົກອາໄສຢູ່ ຄືກັບວ່າຜີຮ້າຍສົກກະປົກແມ່ນໝູ່ ແລະ ເພື່ອນຂອງພວກເຂົາ, ຄືກັບວ່າໂລກມະນຸດເປັນກຸ່ມອັນຕະພານ[2] ຍ້ອນທາດແທ້ເດີມຂອງມະນຸດໄດ້ຫາຍໄປໂດຍບໍ່ມີການສົ່ງບອກ ແລະ ມັນໄດ້ຫາຍໄປໂດຍບໍ່ມີຮ່ອງຮອຍ. ການປາກົດຕົວຂອງຜູ້ຄົນມີບາງສິ່ງຂອງຜີຮ້າຍສົກກະປົກທີ່ກ່ຽວກັບການປາກົດຕົວນັ້ນ; ຍິ່ງໄປກວ່ານັ້ນ ການກະທຳຂອງພວກເຂົາແມ່ນຖືກຈັດການໂດຍຜີຮ້າຍທີ່ສົກກະປົກ. ມື້ນີ້, ພວກເຂົາບໍ່ໄດ້ເບິ່ງແຕກຕ່າງຈາກຜີຮ້າຍທີ່ສົກກະປົກ, ຄືກັບວ່າພວກເຂົາເກີດຈາກຜີຮ້າຍທີ່ສົກກະປົກ. ຍິ່ງໄປກວ່ານັ້ນ, ຜູ້ຄົນຍັງຮັກ ແລະ ສະໜັບສະໜູນບັນພະບຸລຸດຂອງພວກເຂົາຫຼາຍທີ່ສຸດ. ບໍ່ມີຜູ້ໃດຮູ້ຈັກວ່າ ມະນຸດຖືກກົດຂີ່ຂົ່ມເຫັງໂດຍຊາຕານຕັ້ງແຕ່ດົນແລ້ວ ຈົນພວກເຂົາ

2 “ກຸ່ມອັນຕະພານ” ໝາຍເຖິງຄວາມເຊື່ອມຊາມຂອງມະນຸດຊາດ ແລະ ການທີ່ບໍ່ມີມະນຸດທີ່ບໍລິສຸດຢູ່ທ່າມກາງມະນຸດຊາດ.

ກາຍມາເປັນລີງໂທນໃຫຍ່ໃນພູເຂົາ. ດວງຕາທີ່ມີຮອຍເລືອດຂອງພວກເຂົາແມ່ນມີລັກສະນະທີ່ອ້ອນວອນ ແລະ ໃນແສງສະຫວ່າງມືດມົວທີ່ສ່ອງແສງຈາກດວງຕາເຫຼົ່ານັ້ນແມ່ນຮ່ອງຮອຍນ້ອຍໆຂອງເຈດຕະນາອັນຮ້າຍກາດຂອງຜີຮ້າຍທີ່ສົກກະປົກ. ໃບໜ້າຂອງພວກເຂົາແມ່ນຖືກປົກຄຸມດ້ວຍຮອຍແຫ່ວ, ມີຮອຍຄືກັບເປືອກໄມ້ຂອງຕົ້ນແປກ, ປາກຂອງພວກເຂົາຍື່ນອອກມານອກ ຄືກັບວ່າຖືກອອກແບບໂດຍຊາຕານ, ຫູຂອງພວກເຂົາແມ່ນຖືກປົກຄຸມດ້ວຍຮອຍເປື້ອນຂ້າງໃນ ແລະ ນອກ, ຫຼັງຂອງພວກເຂົາກົ່ງ, ຂາຂອງພວກເຂົາດີ້ນລົນໃນການຄ້ຳຮ່າງກາຍຂອງພວກເຂົາ ແລະ ແຂນທີ່ມີແຕ່ກະດູກຂອງພວກເຂົາແກວ່ງໄກວໄປຂ້າງຫຼັງ ແລະ ໄປຂ້າງໜ້າເປັນຈັງຫວະ. ມັນຄືກັບວ່າພວກເຂົາພຽງແຕ່ຈ່ອຍຫຼາຍເທົ່ານັ້ນ ແຕ່ຫຼັງຈາກນັ້ນອີກ ພວກເຂົາກໍຍັງຕຸ້ຍສໍ່າໝີພູເຂົາ. ພາຍໃນ ແລະ ພາຍນອກ, ພວກເຂົາຕົບແຕ່ງ ແລະ ແຕ່ງຕົວຄືກັບທະນີຈາກຍຸກບູຮານ, ມັນຄືກັບວ່າ ໃນປັດຈຸບັນ ທະນີເຫຼົ່ານີ້ຍັງບໍ່ໄດ້ວິວັດທະນາການກາຍເປັນ[3] ສິ່ງທີ່ມີຮູບຮ່າງຂອງມະນຸດໃນຍຸກສະໄໝໃໝ່ຢ່າງສົມບູນ, ພວກເຂົາຈັ່ງແມ່ນຫຼ້າຫຼັງ.

ມະນຸດດຳລົງຊີວິດຄຽງຄູ່ກັບສັດ ແລະ ພວກເຂົາເຂົ້າກັນໄດ້ເປັນຢ່າງດີ ໂດຍບໍ່ມີຂໍ້ໂຕ້ແຍ້ງ ຫຼື ການຜິດຖຽງກັນທາງວາຈາ. ມະນຸດເອົາໃຈຍາກໃນການທີ່ພວກເຂົາດູແລ ແລະ ຫ່ວງໃຍສັດ ແລະ ສັດກໍມີຢູ່ເພື່ອຄວາມຢູ່ລອດຂອງມະນຸດ, ເພື່ອຜົນປະໂຫຍດຂອງພວກເຂົາເປັນພິເສດ ໂດຍບໍ່ມີປະໂຫຍດໃຫ້ແກ່ພວກມັນເອງ ແລະ ພວກມັນເຊື່ອຟັງມະນຸດຢ່າງສົມບູນ ແລະ ທັງໝົດ. ຕໍ່ການປາກົດທັງໝົດ, ຄວາມສຳພັນລະຫວ່າງມະນຸດ ແລະ ສັດຮ້າຍແມ່ນຄວາມສຳພັນທີ່ໃກ້ຊິດ[4] ແລະ ເຂົ້າກັນໄດ້ດີ[5] ແລະ ມັນຈະເບິ່ງຄືກັບວ່າ ຜີຮ້າຍທີ່ສົກກະປົກແມ່ນການຮ່ວມກັນທີ່ສົມບູນລະຫວ່າງມະນຸດ ແລະ ສັດຮ້າຍ. ສະນັ້ນ ມະນຸດ ແລະ ຜີຮ້າຍທີ່ສົກກະປົກເທິງແຜ່ນດິນໂລກຈຶ່ງຍິ່ງໃກ້ຊິດກັນຫຼາຍຂຶ້ນ ແລະ ບໍ່ສາມາດແຍກອອກຈາກກັນໄດ້: ເຖິງແມ່ນວ່ານອກຈາກຜີຮ້າຍທີ່ສົກກະປົກແລ້ວ, ມະນຸດກໍຍັງຄົງເຊື່ອມໂຍງກັບພວກມັນ; ໃນຂະນະດຽວກັນ, ຜີຮ້າຍທີ່ສົກກະປົກບໍ່ໄດ້ຢັບຢັ້ງຫຍັງຈາກມະນຸດ ແລະ "ອຸທິດ" ທຸກສິ່ງທີ່ພວກມັນມີໃຫ້ແກ່ພວກເຂົາ. ໃນແຕ່ລະມື້, ຜູ້ຄົນກະໂດດໂລດເຕັ້ນດ້ວຍຄວາມດີໃຈໃນ "ພະລາຊະວັງຂອງກະສັດແຫ່ງນະຮົກ", ຫຼິ້ນສະໜຸກສະໜານກັບ "ກະສັດແຫ່ງນະຮົກ" (ບັນພະບຸລຸດຂອງພວກເຂົາ) ແລະ ຖືກມັນຈັດການ ຈົນໃນປັດຈຸບັນ ຜູ້ຄົນໄດ້ຖືກໂອບດ້ວຍຮອຍເປື້ອນ ແລະ ຫຼັງຈາກທີ່ໄດ້ໃຊ້ເວລາຢ່າງຫຼວງຫຼາຍໃນດິນແດນມໍລະນາ, ພວກເຂົາກໍເຊົາປາຖະໜາທີ່ຈະກັບຄືນສູ່ "ໂລກຂອງຄົນມີຊີວິດ" ຕັ້ງແຕ່ດົນແລ້ວ. ສະນັ້ນ ທັນທີທີ່ພວກເຂົາໄດ້ເຫັນແສງສະຫວ່າງ ແລະ ຫຼຽວເຫັນການຮຽກຮ້ອງຂອງພຣະເຈົ້າ ແລະ ລັກສະນະຂອງພຣະເຈົ້າ ແລະ ພາລະກິດຂອງພຣະອົງ,

---

3 "ວິວັດທະນາການກາຍເປັນ" ໝາຍເຖິງ "ການວິວັດທະນາການ" ຂອງທະນີຄົນເປັນຮູບຮ່າງຂອງຜູ້ຄົນໃນປັດຈຸບັນ. ເຈດຕະນາແມ່ນເພື່ອສຽດສີ: ໃນຄວາມເປັນຈິງແລ້ວແມ່ນບໍ່ມີທິດສະດີດັ່ງກ່າວທີ່ທະນີບູຮານປ່ຽນແປງກາຍເປັນມະນຸດທີ່ຍ່າງຫຼັງຊື່.

4 "ໃກ້ຊິດ" ແມ່ນຖືກນຳໃຊ້ເພື່ອເຍາະເຍີ້ຍ.

5 "ເຂົ້າກັນໄດ້ດີ" ແມ່ນຖືກນຳໃຊ້ເພື່ອເຍາະເຍີ້ຍ.

ພວກເຂົາກໍຮູ້ສຶກກະວົນກະວາຍໃຈ ແລະ ກັງວົນໃຈ ໂດຍທີ່ຍັງປາຖະໜາທີ່ຈະກັບຄືນສູ່ໂລກເບື້ອງລຸ່ມ ແລະ ອາໄສຢູ່ກັບຜີ. ພວກເຂົາລືມພຣະເຈົ້າຕັ້ງແຕ່ດົນແລ້ວ ແລະ ດ້ວຍເຫດນັ້ນ ພວກເຂົາກໍໄດ້ພະເນຈອນຢູ່ໃນປ່າຊ້າ. ເມື່ອເຮົາພົບກັບບຸກຄົນໆໜຶ່ງ, ເຮົາພະຍາຍາມລົມກັບນາງ ແລະ ມີພຽງແຕ່ໃນເວລານີ້ທີ່ເຮົາໄດ້ຄົ້ນພົບວ່າບຸກຄົນທີ່ຢືນຢູ່ຕໍ່ໜ້າເຮົາບໍ່ແມ່ນມະນຸດເລີຍ. ຜົມຂອງນາງຫຍຸ້ງ, ໃບໜ້າຂອງນາງສີກະປິກ ແລະ ມີບາງສິ່ງທີ່ຄືກັບໝາປ່າກ່ຽວກັບຮອຍຍິ້ມທີ່ເຫັນແຂ້ວຂອງນາງ. ສະນັ້ນນາງຈຶ່ງເບິ່ງຄືມີຄວາມອຶດອັດຂອງຜີທີ່ຫາກໍປາກົດຈາກຂຸມຝັງສົບ ແລະ ຫຼຽວເບິ່ງມະນຸດໃນໂລກທີ່ມີຊີວິດ. ບຸກຄົນນີ້ກໍາລັງພະຍາຍາມຈັດຮີມສົບຂອງນາງໃຫ້ເປັນຮອຍຍິ້ມ; ມັນປາກົດວ່າທັງມີເລ່ລ່ຽມ ແລະ ເປັນຕາຢ້ານ. ເມື່ອນາງຍິ້ມໃສ່ເຮົາ, ມັນຄືກັບວ່ານາງມີບາງສິ່ງທີ່ຈະເວົ້າ ແຕ່ເບິ່ງຄືກັບບໍ່ສາມາດຫາຄໍາເວົ້າໄດ້ ແລະ ດ້ວຍເຫດນັ້ນ ສິ່ງທີ່ນາງສາມາດເຮັດໄດ້ກໍມີແຕ່ຢືນຂ້າງດຽວ ໂດຍເບິ່ງຊືງວ່າງເປົ່າ ແລະ ໂງ່ຈ້າ. ເມື່ອໄດ້ເຫັນຈາກຂ້າງຫຼັງ, ນາງກໍເບິ່ງຄືຈະສະເໜີ "ຮູບພາບອັນຍິ່ງໃຫຍ່ຂອງປະຊາຊົນຄົນຈີນທີ່ໃຊ້ແຮງງານ"; ໃນຊ່ວງເວລາເຫຼົ່ານີ້, ນາງຍິ່ງປາກົດວ່າເປັນຕາລັງກຽດຫຼາຍຂຶ້ນ, ລະລຶກເຖິງຮູບພາບຂອງເຊື້ອສາຍຂອງ ຢານ ຮວງ/ຢານ ຫວາງໃນຕໍານານຈາກອະດີດ[ຄ] ທີ່ຜູ້ຄົນກ່າວເຖິງ. ເມື່ອເຮົາຖາມນາງ, ນາງກໍກົ້ມຫົວຂອງນາງລົງຢ່າງງຽບໆ. ນາງໃຊ້ເວລາດົນເຕີບເພື່ອຕອບ ແລະ ນາງຂົ່ມໃຈຫຼາຍເມື່ອນາງຕອບ. ນາງບໍ່ສາມາດຮັກສາໃຫ້ມືຂອງນາງຢູ່ຊື່ໆ ແລະ ດູດນິ້ວມືທັງສອງຂອງນາງຄືກັບແມວ. ມີແຕ່ຕອນນີ້ເທົ່ານັ້ນທີ່ເຮົາຮູ້ວ່າມືຂອງມະນຸດເບິ່ງຄືກັບວ່າພວກມັນຫາກໍຄຸ້ຍຂີ້ເຫຍື້ອ ໂດຍທີ່ເລັບມືອັນສີກະປິກຂອງພວກເຂົາຕົກສີຫຼາຍຈົນຄົນໆໜຶ່ງຈະບໍ່ຮູ້ໄດ້ຈັກເທື່ອວ່າເລັບມືເຫຼົ່ານັ້ນຄວນເປັນສີຂາວ, ນິ້ວມືທີ່ "ບາງນ້ອຍ" ມີຮອຍດິນຢ່າງໜາ. ຍິ່ງເປັນຕາລັງກຽດກວ່ານັ້ນແມ່ນຫຼັງມືຂອງພວກເຂົາທີ່ເບິ່ງຄືກັບຜິວໜັງຂອງໄກ່ທີ່ຫາກໍຖືກຫຼົກຂົນ. ຮອຍທີ່ຢູ່ທົ່ວມືຂອງພວກເຂົາເກືອບເຕັມໄປດ້ວຍລາຄາເລືອດ ແລະ ເຫື່ອຂອງແຮງງານມະນຸດ ເຊິ່ງຢູ່ພາຍໃນມືແຕ່ລະຂ້າງແມ່ນສິ່ງທີ່ເບິ່ງຄືກັບດິນ, ເບິ່ງຄືວ່າກະຈາຍ "ກິ່ນຫອມຂອງດິນ", ເປັນຕົວແທນໃຫ້ກັບຄວາມລໍ້າຄ່າ ແລະ ຄວາມເປັນຕາສັນລະເສີນໄດ້ດີຂຶ້ນຂອງວິນຍານແຫ່ງການທົນທຸກຂອງມະນຸດ ເພື່ອວ່າວິນຍານແຫ່ງການທົນທຸກນີ້ຈະຖືກຝັງຕົດເລິກຢູ່ໃນແຕ່ລະຮອຍທີ່ຢູ່ມືຂອງມະນຸດ. ນັບຕັ້ງແຕ່ຫົວຮອດນິ້ວຕີນ, ບໍ່ມີເຄື່ອງນຸ່ງຫົ່ມໃດທີ່ມະນຸດສວມໃສ່ເບິ່ງຄືກັບໜັງສັດ ແຕ່ພວກເຂົາຮູ້ພຽງໜ້ອຍດຽວວ່າ ເຖິງພວກເຂົາຈະ "ເປັນຕານັບຖື" ຫຼາຍ, ຄຸນຄ່າຂອງພວກເຂົາກໍມີໜ້ອຍກວ່າຂົນຂອງໝາຈອກແທ້ໆ ແລ້ວແຮງໜ້ອຍກວ່າຂົນອັນດຽວຂອງນົກຍູງ ຍ້ອນເຄື່ອງນຸ່ງຫົ່ມຂອງພວກເຂົາໄດ້ເຮັດໃຫ້ພວກເຂົາຂີ້ຮ້າຍຫຼາຍຕັ້ງແຕ່ດົນແລ້ວຈົນພວກເຂົາເບິ່ງຂີ້ຮ້າຍກວ່າໝູ ແລະ ໝາ. ເສື້ອຄັບໆຂອງນາງຫ້ອຍລົງມາເຄິ່ງຫຼັງຂອງນາງ ແລະຂາໂສ້ງຂອງນາງ ເຊິ່ງຄືກັບໄສ້ໄກ່ ໂດຍເປີດໂປງຄວາມຂີ້ຮ້າຍຂອງນາງຢ່າງສົມບູນຕໍ່ແສງຕາເວັນທີ່

ຄ "ຢານ" ແລະ "ຮວງ" ແມ່ນຊື່ຂອງຈັກກະພັດສອງອົງໃນຕໍານານທີ່ຢູ່ທ່າມກາງຜູ້ໃຫ້ກໍາເນີດວັດທະນະທໍາກຸ່ມທໍາອິດຂອງປະເທດຈີນ. "ຢານ ຫວາງ" ແມ່ນຊື່ຈີນສໍາລັບ "ກະສັດແຫ່ງນະຮົກ". "ຢານ ຮວງ" ແລະ "ຢານ ຫວາງ" ແມ່ນອອກສຽງເກືອບຄືກັນໃນພາສາຈີນກາງ.

ເຫຼື້ອມແຈ້ງ. ພວກມັນສັ້ນ ແລະ ຄັບ ຄືກັບວ່ານີ້ແມ່ນເພື່ອສະແດງໃຫ້ເຫັນວ່າ ຕີນຂອງນາງບໍ່ໄດ້ຖືກຜູກມັດຕັ້ງແຕ່ດົນແລ້ວ: ພວກມັນເປັນຕີນທີ່ໃຫຍ່, ບໍ່ແມ່ນ "ດອກບົວທອງສາມນີ້ມ" ຂອງສັງຄົມທີ່ເກົ່າແກ່ອີກຕໍ່ໄປ. ຊຸດນຸ່ງຂອງບຸກຄົນນີ້ອອກແນວຕາເວັນຕົກເກີນໄປ ແຕ່ຍັງແຕ່ງຕົວຖືກເກີນໄປ. ເມື່ອເຮົາພົບກັບນາງ, ນາງກໍຂີ້ອາຍຢູ່ສະເໝີ, ໃບໜ້າຂອງນາງແດງເຂັ້ມ ແລະ ນາງບໍ່ສາມາດເງີຍຫົວຂອງນາງຂຶ້ນເລີຍ ຄືກັບວ່ານາງຖືກຢຽບຢໍ່າໂດຍຜີຮ້າຍທີ່ສົກກະປົກ ແລະ ບໍ່ສາມາດນຳຕົນເອງມາຫຼຽວເບິ່ງໜ້າຂອງຜູ້ຄົນອີກຕໍ່ໄປ. ຂີ້ຝຸ່ນປົກຄຸມໃບໜ້າຂອງມະນຸດ. ຂີ້ຝຸ່ນນີ້ ເຊິ່ງຕົກລົງມາຈາກທ້ອງຟ້າ ແມ່ນປາກົດວ່າຕົກລົງມາຢ່າງບໍ່ຍຸຕິທຳເທິງໃບໜ້າຂອງມະນຸດທັງໝົດ ໂດຍເຮັດໃຫ້ມັນເບິ່ງຄືກັບຂົນອ່ອນຂອງນົກຈອກ. ດວງຕາຂອງມະນຸດກໍຄືກັບດວງຕາຂອງນົກຈອກເຊັ່ນກັນ: ນ້ອຍ ແລະ ແຫ້ງ ໂດຍທີ່ບໍ່ມີຄວາມສົດໃສເລີຍ. ເມື່ອຜູ້ຄົນເວົ້າ, ຄຳເວົ້າຂອງພວກເຂົາແມ່ນລັງເລ ແລະ ຫຼົບຫຼີກຕາມນິໄສ, ເປັນຕາຂະແຫຍງ ແລະ ເປັນຕາລັງກຽດຕໍ່ຄົນອື່ນ. ແຕ່ຫຼາຍຄົນກໍຍົກຍ້ອງສັນລະເສີນໃຫ້ຜູ້ຄົນດັ່ງກ່າວເປັນ "ຕົວແທນຂອງຊົນຊາດ". ນີ້ບໍ່ແມ່ນເລື່ອງຕະຫຼົກບໍ? ພຣະເຈົ້າປາຖະໜາທີ່ຈະປ່ຽນແປງຜູ້ຄົນ, ຮັກສາພວກເຂົາ, ຊ່ວຍຊີວິດພວກເຂົາຈາກຂຸມຝັງສົບແຫ່ງຄວາມຕາຍ ເພື່ອພວກເຂົາຈະໄດ້ຫຼົບໜີຈາກຊີວິດທີ່ພວກເຂົາມີໃນດິນແດນມໍລະນາ ແລະ ໃນນະຮົກ.

# ພາລະກິດ ແລະ ທາງເຂົ້າ (6)

ພາລະກິດ ແລະ ທາງເຂົ້າແມ່ນສິ່ງທີ່ເປັນຈິງໂດຍທຳມະຊາດ; ພວກມັນໝາຍເຖິງພາລະກິດຂອງພຣະເຈົ້າ ແລະ ທາງເຂົ້າຂອງມະນຸດ. ຄວາມບໍ່ສາມາດຢ່າງສິ້ນເຊີງຂອງມະນຸດໃນການເບິ່ງອອກເຊິ່ງໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ແລະ ພາລະກິດຂອງພຣະເຈົ້າໄດ້ນຳຄວາມຫຍຸ້ງຍາກທີ່ສຸດມາສູ່ທາງເຂົ້າຂອງເຂົາ. ຈົນເຖິງປັດຈຸບັນ, ຫຼາຍຄົນຍັງບໍ່ຮູ້ຈັກພາລະກິດທີ່ພຣະເຈົ້າຈະເຮັດໃຫ້ສຳເລັດໃນຍຸກສຸດທ້າຍ ຫຼື ເປັນຫຍັງພຣະເຈົ້າຈຶ່ງທົນຕໍ່ຄວາມອັບອາຍທີ່ສຸດເພື່ອມາຢູ່ໃນເນື້ອໜັງ ເພື່ອຢືນຍັດຢູ່ກັບມະນຸດທັງໃນຍາມສຸກ ແລະ ຍາມທຸກ. ມະນຸດບໍ່ຮູ້ຫຍັງເລີຍກ່ຽວກັບສິ່ງເຫຼົ່ານີ້ນັບແຕ່ເປົ້າໝາຍໃນພາລະກິດຂອງພຣະເຈົ້າຈົນຮອດຈຸດປະສົງໃນແຜນການຂອງພຣະເຈົ້າສຳລັບຍຸກສຸດທ້າຍ. ດ້ວຍຫຼາກຫຼາຍເຫດຜົນ, ຜູ້ຄົນບໍ່ກະຕືລືລົ້ນ ແລະ ຄຸມເຄືອ[1] ຢູ່ສະເໝີຕໍ່ທາງເຂົ້າທີ່ພຣະເຈົ້າຮຽກຮ້ອງຈາກພວກເຂົາ ເຊິ່ງໄດ້ນຳຄວາມຫຍຸ້ງຍາກຢ່າງໃຫຍ່ຫຼວງມາສູ່ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ. ເບິ່ງຄືວ່າຜູ້ຄົນໄດ້ກາຍເປັນອຸປະສັກທັງໝົດ ແລະ ຈົນເຖິງປັດຈຸບັນ ພວກເຂົາຍັງບໍ່ມີຄວາມເຂົ້າໃຈຢ່າງຊັດເຈນ. ດ້ວຍເຫດນັ້ນເຮົາຈຶ່ງຄິດວ່າພວກເຮົາຄວນເວົ້າກ່ຽວກັບພາລະກິດທີ່ພຣະເຈົ້າປະຕິບັດໃນມະນຸດ ແລະ ເຈດຕະນາອັນຮີບດ່ວນຂອງພຣະເຈົ້າ ເພື່ອເຮັດໃຫ້ພວກເຈົ້າທຸກຄົນກາຍມາເປັນຄົນຮັບໃຊ້ທີ່ຊື່ສັດຂອງພຣະເຈົ້າ ຜູ້ທີ່ຈະຍອມຕາຍແທນທີ່ຈະປະຕິເສດພຣະເຈົ້າ ແລະ ຍອມທົນຄວາມອັບອາຍທຸກຢ່າງຄືກັບໂຢບ; ແລະຜູ້ທີ່ຈະມອບຊີວິດທັງໝົດຂອງພວກເຈົ້າໃຫ້ກັບພຣະເຈົ້າ ແລະ ກາຍມາເປັນມິດສະຫາຍທີ່ພຣະເຈົ້າຮັບເອົາໃນຍຸກສຸດທ້າຍຄືກັບເປໂຕ. ຂໍໃຫ້ອ້າຍເອື້ອຍນ້ອງທຸກຄົນສາມາດເຮັດທຸກສິ່ງສຸດກຳລັງຂອງພວກເຂົາ ເພື່ອມອບຊີວິດທັງໝົດຂອງພວກເຂົາໃຫ້ແກ່ຄວາມປະສົງໃນສະຫວັນຂອງພຣະເຈົ້າ, ກາຍມາເປັນຄົນຮັບໃຊ້ທີ່ບໍລິສຸດໃນເຮືອນຂອງພຣະເຈົ້າ ແລະ ໄດ້ຮັບສັນຍາຢ່າງຫຼວງຫຼາຍທີ່ພຣະເຈົ້າປະທານໃຫ້ ເພື່ອວ່າຫົວໃຈຂອງພຣະເຈົ້າພຣະບິດາຈະສາມາດມີການພັກຜ່ອນທີ່ສະຫງົບສຸກໃນອີກບໍ່ດົນ. "ການເຮັດໃຫ້ຄວາມປະສົງຂອງພຣະເຈົ້າພຣະບິດາສຳເລັດລົງ" ຄວນເປັນຄຳຂວັນຂອງທຸກຄົນທີ່ຮັກພຣະເຈົ້າ. ຄຳເວົ້າເຫຼົ່ານີ້ຄວນເຮັດໜ້າທີ່ເປັນຄຳຊີ້ນຳສຳລັບທາງເຂົ້າຂອງມະນຸດ ແລະ ເຂັມທິດທີ່ຊີ້ນຳການກະທຳຂອງເຂົາ. ນີ້ແມ່ນການຕັດສິນໃຈທີ່ມະນຸດຄວນມີ. ການເຮັດໃຫ້ພາລະກິດຂອງພຣະເຈົ້າສຳເລັດຢ່າງສົມບູນເທິງແຜ່ນດິນໂລກ ແລະ ການຮ່ວມມືກັບພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ, ນີ້ແມ່ນໜ້າທີ່ຂອງມະນຸດ ຈົນເຖິງມື້ໜຶ່ງເມື່ອພາລະກິດຂອງພຣະເຈົ້າສຳເລັດແລ້ວ ມະນຸດກໍຈະສັ່ງລາພຣະອົງຢ່າງມີຄວາມສຸກເມື່ອພຣະອົງກັບຄືນຫາພຣະບິດາທີ່ຢູ່ໃນສະຫວັນໃນເວລາທີ່ໄວກ່ອນຄວນ. ນີ້ບໍ່ແມ່ນຄວາມຮັບຜິດຊອບທີ່ມະນຸດຄວນປະຕິບັດໃຫ້ສຳເລັດບໍ?

ໃນຍຸກແຫ່ງພຣະຄຸນ, ພຣະເຈົ້າໄດ້ກັບຄືນສູ່ສະຫວັນຊັ້ນສາມ ແລະ ພາລະກິດຂອງພຣະເຈົ້າໃນການກູ້ໄຖ່ມະນຸດຊາດທັງປວງກໍໄດ້ກ້າວໄປສູ່ພາກສ່ວນສຸດທ້າຍຂອງມັນແທ້ໆແລ້ວ. ສິ່ງທີ່ຍັງຄົງຢູ່

---

1 "ຄຸມເຄືອ" ບົ່ງບອກວ່າຜູ້ຄົນບໍ່ມີຄວາມເຂົ້າໃຈທີ່ຊັດເຈນໃນພາລະກິດຂອງພຣະເຈົ້າ.

ເທິງແຜ່ນດິນໂລກແມ່ນໄມ້ກາງແຂນທີ່ພຣະເຢຊູແບກຢູ່ຫຼັງຂອງພຣະອົງ, ຜ້າຝ້າຍລີນິນສວຍງາມທີ່ພຣະເຢຊູຖືກປົກຄຸມໄວ້ ແລະ ມົງກຸດໜາມ ແລະ ຜ້າຄຸມສີມ່ວງອ່ອນທີ່ພຣະເຢຊູສວມໃສ່ (ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຊາວຢິວໃຊ້ເພື່ອເຍາະເຍີ້ຍພຣະອົງ). ນັ້ນກໍຄື ຫຼັງຈາກທີ່ພາລະກິດໃນການຄຶງພຣະເຢຊູເທິງໄມ້ກາງແຂນໄດ້ກໍ່ໃຫ້ເກີດມີຄວາມຮູ້ສຶກຫຼາຍ, ສິ່ງຕ່າງໆກໍໄດ້ສະຫງົບລົງ. ຈາກນັ້ນເປັນຕົ້ນມາ, ສາວົກຂອງພຣະເຢຊູກໍເລີ່ມປະຕິບັດພາລະກິດຂອງພຣະອົງຕໍ່ໄປ ໂດຍນຳພາ ແລະ ຫົດນ້ຳໃນຄຣິສຕະຈັກທຸກຫົນທຸກແຫ່ງ. ເນື້ອຫາຂອງພາລະກິດຂອງພວກເຂົາເປັນແບບນີ້: ພວກເຂົາຂໍໃຫ້ທຸກຄົນກັບໃຈ, ສາລະພາບບາບຂອງພວກເຂົາ ແລະ ຮັບບັບຕິດສະມາ; ແລະ ສາວົກທຸກຄົນເດີນໜ້າເຜີຍແຜ່ເລື່ອງລາວພາຍໃນ ເຊິ່ງເປັນເລື່ອງທີ່ບໍ່ໄດ້ແຕ່ງຂຶ້ນ ກ່ຽວກັບການຖືກຄຶງເທິງໄມ້ກາງແຂນຂອງພຣະເຢຊູ ແລະ ດ້ວຍເຫດນັ້ນ ທຸກຄົນກໍບໍ່ສາມາດເຮັດຫຍັງໄດ້ ນອກຈາກລົ້ມໝອບລົງຕໍ່ໜ້າພຣະເຢຊູເພື່ອສາລະພາບບາບຂອງພວກເຂົາ; ແລະ ຍິ່ງໄປກວ່ານັ້ນ ພວກສາວົກກໍໄປທຸກບ່ອນເພື່ອເຜີຍແຜ່ພຣະທຳທີ່ພຣະເຢຊູໄດ້ກ່າວ. ຕັ້ງແຕ່ເວລານັ້ນກໍເລີ່ມການສ້າງຄຣິສຕະຈັກໃນຍຸກແຫ່ງພຣະຄຸນ. ສິ່ງທີ່ພຣະເຢຊູເຮັດໃນລະຫວ່າງຍຸກນັ້ນຍັງແມ່ນການເວົ້າກ່ຽວກັບຊີວິດຂອງມະນຸດ ແລະ ຄວາມປະສົງຂອງພຣະບິດາຜູ້ສະຖິດຢູ່ສະຫວັນ ຍ້ອນມັນເປັນພຽງຍຸກທີ່ແຕກຕ່າງກັນ ເຊິ່ງມີຄຳເວົ້າ ແລະ ການປະຕິບັດຫຼາຍຢ່າງທີ່ແຕກຕ່າງກັນຫຼາຍຈາກປັດຈຸບັນ. ຢ່າງໃດກໍຕາມ, ໃນດ້ານແກ່ນແທ້ແມ່ນຄືກັນ: ທັງສອງແມ່ນພາລະກິດຂອງພຣະວິນຍານຂອງພຣະເຈົ້າໃນເນື້ອໜັງຢ່າງແນ່ນອນ ແລະ ຢ່າງຖືກຕ້ອງ. ພາລະກິດປະເພດນີ້ ແລະ ພຣະຄຳໄດ້ສືບຕໍ່ຈົນເຖິງປັດຈຸບັນ ແລະ ດ້ວຍເຫດນັ້ນ ນີ້ຈຶ່ງແມ່ນປະເພດຂອງສິ່ງທີ່ຍັງຖືກແບ່ງປັນໃນສະຖາບັນທາງສາສະໜາໃນປັດຈຸບັນ ແລະ ມັນບໍ່ໄດ້ປ່ຽນແປງເລີຍ. ເມື່ອພາລະກິດຂອງພຣະເຢຊູສຳເລັດລົງ ແລະ ຄຣິສຕະຈັກໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງພຣະເຢຊູຄຣິດແລ້ວ, ຢ່າງໃດກໍ່ຕາມ ພຣະເຈົ້າໄດ້ເລີ່ມແຜນການຂອງພຣະອົງສຳລັບຂັ້ນຕອນອື່ນໃນພາລະກິດຂອງພຣະອົງ ເຊິ່ງເປັນເລື່ອງການບັງເກີດເປັນມະນຸດໃນຍຸກສຸດທ້າຍຂອງພຣະອົງ. ຕາມທີ່ມະນຸດເຫັນ, ການຖືກຄຶງເທິງໄມ້ກາງແຂນຂອງພຣະເຈົ້າໄດ້ເຮັດສຳເລັດພາລະກິດຂອງການບັງເກີດເປັນມະນຸດຂອງພຣະເຈົ້າແລ້ວ, ໄດ້ໄຖ່ບາບມະນຸດຊາດທັງປວງ ແລະ ເຮັດໃຫ້ພຣະອົງຍຶດກະແຈສູ່ດິນແດນມໍລະນາ. ທຸກຄົນຄິດວ່າພາລະກິດຂອງພຣະເຈົ້າຖືກເຮັດໃຫ້ສຳເລັດຢ່າງສົມບູນແລ້ວ. ໃນຄວາມຈິງ, ຈາກມຸມມອງຂອງພຣະເຈົ້າແມ່ນມີພຽງແຕ່ສ່ວນເລັກນ້ອຍຂອງພາລະກິດຂອງພຣະອົງທີ່ຖືກເຮັດໃຫ້ສຳເລັດ. ສິ່ງທີ່ພຣະອົງເຮັດແມ່ນພຽງແຕ່ໄຖ່ບາບມະນຸດຊາດ; ພຣະອົງບໍ່ໄດ້ເອົາຊະນະມະນຸດຊາດ ແລ້ວນັບພາສາຫຍັງກັບການປ່ຽນແປງໃບໜ້າແບບຊາຕານຂອງມະນຸດ. ນັ້ນຄືເຫດຜົນທີ່ພຣະເຈົ້າກ່າວວ່າ "ເຖິງແມ່ນເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາໄດ້ຜ່ານຄວາມເຈັບປວດແຫ່ງຄວາມຕາຍ, ນັ້ນກໍບໍ່ແມ່ນເປົ້າໝາຍທັງໝົດຂອງການບັງເກີດເປັນມະນຸດຂອງເຮົາ. ພຣະເຢຊູເປັນພຣະບຸດອັນເປັນທີ່ຮັກຂອງເຮົາ ແລະ ຖືກຄຶງເທິງໄມ້ກາງແຂນເພື່ອເຮົາ ແຕ່ພຣະອົງບໍ່ໄດ້ສຳເລັດພາລະກິດຂອງເຮົາລົງຢ່າງສົມບູນ. ພຣະອົງພຽງແຕ່ປະຕິບັດສ່ວນໜຶ່ງຂອງພາລະກິດນັ້ນ". ສະນັ້ນ ພຣະເຈົ້າຈຶ່ງເລີ່ມແຜນການຮອບທີສອງເພື່ອສືບຕໍ່ພາລະກິດຂອງການບັງເກີດເປັນມະນຸດ. ເຈດຕະນາສຸດທ້າຍຂອງພຣະເຈົ້າກໍຄືການເຮັດໃຫ້

ທຸກຄົນສົມບູນ ແລະ ເພື່ອຮັບເອົາທຸກຄົນທີ່ຖືກຊ່ວຍຈາກມືຂອງຊາຕານ ເຊິ່ງນັ້ນກໍຄືເຫດຜົນທີ່ວ່າເປັນຫຍັງພຣະເຈົ້າຈຶ່ງກຽມການທີ່ຈະສ່ຽງອັນຕະລາຍມາຢູ່ໃນເນື້ອໜັງອີກຄັ້ງ. ຄວາມໝາຍຂອງ "ການບັງເກີດເປັນມະນຸດ" ກໍຄືພຣະອົງທີ່ບໍ່ໄດ້ນຳເອົາຄວາມສະຫງ່າລາສີ (ເພາະພາລະກິດຂອງພຣະເຈົ້າຍັງບໍ່ໄດ້ສຳເລັດເທື່ອ) ແຕ່ຜູ້ທີ່ປາກົດໃນຕົວຕົນຂອງພຣະບຸດອັນເປັນທີ່ຮັກ ແລະ ພຣະອົງເປັນພຣະຄຣິດ ທີ່ພຣະເຈົ້າພໍໃຈເປັນຢ່າງຍິ່ງ. ນີ້ຄືເຫດຜົນທີ່ວ່າເປັນຫຍັງສິ່ງນີ້ຈຶ່ງເວົ້າວ່າເປັນ "ການສ່ຽງອັນຕະລາຍ". ເນື້ອໜັງທີ່ບັງເກີດເປັນມະນຸດມີອຳນາດໜ້ອຍດຽວ ແລະ ຕ້ອງນຳໃຊ້ຢ່າງລະມັດລະວັງຫຼາຍ[2] ແລະ ອຳນາດຂອງພຣະອົງແມ່ນຫ່າງໄກຫຼາຍຈາກສິດອຳນາດຂອງພຣະບິດາທີ່ຢູ່ໃນສະຫວັນ; ພຣະອົງພຽງແຕ່ປະຕິບັດພັນທະກິດຂອງເນື້ອໜັງເທົ່ານັ້ນ, ເຮັດພາລະກິດຂອງພຣະເຈົ້າພຣະບິດາ ແລະ ໜ້າທີ່ທີ່ໄດ້ຮັບມອບໝາຍຂອງພຣະອົງໃຫ້ສຳເລັດລົງໂດຍບໍ່ຫຍຸ້ງກັບພາລະກິດອື່ນໆ ແລະ ພຣະອົງພຽງແຕ່ສຳເລັດສ່ວນໜຶ່ງຂອງພາລະກິດ. ນີ້ຄືເຫດຜົນທີ່ວ່າເປັນຫຍັງພຣະເຈົ້າຈຶ່ງຖືກເອີ້ນວ່າ "ພຣະຄຣິດ" ເມື່ອພຣະອົງມາເທິງແຜ່ນດິນໂລກ. ນັ້ນແມ່ນຄວາມໝາຍທີ່ຝັງຢູ່ໃນຕົວຂອງຊື່. ເຫດຜົນທີ່ມີການເວົ້າວ່າ ການມາເຖິງແມ່ນມາພ້ອມກັບການລໍ້ລວງກໍເພາະມີພຽງແຕ່ພາລະກິດໜຶ່ງປະການເທົ່ານັ້ນທີ່ຖືກເຮັດໃຫ້ສຳເລັດ. ຍິ່ງໄປກວ່ານັ້ນ, ເຫດຜົນທີ່ພຣະເຈົ້າພຣະບິດາພຽງແຕ່ເອີ້ນພຣະອົງວ່າ "ພຣະຄຣິດ" ແລະ "ພຣະບຸດອັນເປັນທີ່ຮັກ" ແຕ່ບໍ່ໄດ້ມອບຄວາມສະຫງ່າລາສີທັງໝົດໃຫ້ກັບພຣະອົງກໍຍ້ອນເນື້ອໜັງທີ່ບັງເກີດເປັນມະນຸດໄດ້ມາເພື່ອປະຕິບັດພາລະກິດໜຶ່ງປະການ, ບໍ່ແມ່ນເພື່ອເປັນຕົວແທນໃຫ້ກັບພຣະບິດາທີ່ຢູ່ໃນສະຫວັນ ແຕ່ກົງກັນຂ້າມແມ່ນເພື່ອປະຕິບັດພັນທະກິດຂອງພຣະບຸດອັນເປັນທີ່ຮັກໃຫ້ສຳເລັດ. ເມື່ອພຣະບຸດອັນເປັນທີ່ຮັກເຮັດໜ້າທີ່ທີ່ໄດ້ຮັບມອບໝາຍທັງໝົດສຳເລັດລົງເຊິ່ງພຣະອົງໄດ້ຮັບແບກໄວ້ເທິງບ່າຂອງພຣະອົງ, ພຣະບິດາກໍຈະມອບຄວາມສະຫງ່າລາສີທັງໝົດໃຫ້ກັບພຣະອົງ ພ້ອມກັບຕົວຕົນຂອງພຣະບິດາ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ນີ້ແມ່ນ "ກົດຂອງສະຫວັນ". ເພາະພຣະອົງຜູ້ທີ່ໄດ້ມາຢູ່ໃນເນື້ອໜັງ ແລະ ພຣະບິດາທີ່ຢູ່ໃນສະຫວັນແມ່ນຢູ່ໃນໂລກທີ່ແຕກຕ່າງກັນ, ທັງສອງພຣະອົງພຽງແຕ່ຈ້ອງເບິ່ງກັນ ແລະ ກັນໃນພຣະວິນຍານ, ພຣະບິດາຈັບຕາເບິ່ງພຣະບຸດອັນເປັນທີ່ຮັກ ແຕ່ພຣະບຸດບໍ່ສາມາດເຫັນພຣະບິດາແຕ່ໄກ. ມັນເປັນຍ້ອນໜ້າທີ່ ທີ່ເນື້ອໜັງສາມາດເຮັດໄດ້ແມ່ນນ້ອຍເກີນໄປ ແລະ ມີຄວາມເປັນໄປໄດ້ທີ່ພຣະອົງຈະຖືກຂ້າໃນທຸກເວລາ ຈົນຄົນໆໜຶ່ງສາມາດເວົ້າໄດ້ວ່າການມາເຖິງຄັ້ງນີ້ແມ່ນເຕັມໄປດ້ວຍອັນຕະລາຍຢ່າງໃຫຍ່ຫຼວງ. ສິ່ງນີ້ທຽບເທົ່າກັບການທີ່ພຣະເຈົ້າສະຫຼະພຣະບຸດອັນເປັນທີ່ຮັກຂອງພຣະອົງເຂົ້າສູ່ປາກຂອງເສືອອີກຄັ້ງ ເຊິ່ງເປັນບ່ອນທີ່ອັນຕະລາຍຕໍ່ຊີວິດຂອງພຣະອົງ ໂດຍເອົາພຣະອົງໄປຢູ່ໃນບ່ອນທີ່ຊາຕານເຈາະຈົງທີ່ສຸດ. ເຖິງແມ່ນວ່າໃນຄວາມລຳບາກທີ່ຮ້າຍແຮງເຫຼົ່ານີ້, ພຣະເຈົ້າກໍຍັງມອບພຣະບຸດອັນເປັນທີ່ຮັກຂອງພຣະອົງໃຫ້ກັບຄົນທີ່ຢູ່ໃນບ່ອນສົກກະປົກ ແລະ ບໍ່ມີສິນທຳເພື່ອໃຫ້ພວກເຂົາ "ລ້ຽງພຣະອົງໃຫ້ເປັນຜູ້ໃຫຍ່".

2 "ອຳນາດໜ້ອຍດຽວ ແລະ ຕ້ອງນຳໃຊ້ຢ່າງລະມັດລະວັງຫຼາຍ" ບົ່ງບອກວ່າຄວາມຍາກລຳບາກຂອງເນື້ອໜັງແມ່ນມີຫຼາຍ ແລະ ພາລະກິດທີ່ໄດ້ປະຕິບັດແມ່ນຈຳກັດ.

ນີ້ກໍ່ຍ້ອນວ່າ ການເຮັດເຊັ່ນນັ້ນແມ່ນເປັນວິທີດຽວທີ່ຈະເຮັດໃຫ້ພາລະກິດຂອງພຣະເຈົ້າເບິ່ງຄືວ່າເໝາະສົມ ແລະ ເປັນທຳມະຊາດ ແລະ ມັນເປັນວິທີດຽວທີ່ຈະເຮັດໃຫ້ຄວາມປາຖະໜາທັງໝົດຂອງພຣະເຈົ້າພຣະບິດາສຳເລັດລົງ ແລະ ເຮັດໃຫ້ສ່ວນສຸດທ້າຍຂອງພາລະກິດຂອງພຣະອົງສຳເລັດໃນທ່າມກາງມະນຸດຊາດ. ພຣະເຢຊູພຽງແຕ່ເຮັດໃຫ້ຂັ້ນຕອນໜຶ່ງຂອງພາລະກິດຂອງພຣະເຈົ້າພຣະບິດາສຳເລັດ. ຍ້ອນສິ່ງກີດຂວາງຂອງເນື້ອໜັງທີ່ບັງເກີດເປັນມະນຸດ ແລະ ຄວາມແຕກຕ່າງໃນພາລະກິດທີ່ຕ້ອງເຮັດໃຫ້ສຳເລັດ, ພຣະເຢຊູເອງກໍບໍ່ຮູ້ຈັກວ່າ ຈະມີການກັບມາເປັນເນື້ອໜັງຄັ້ງທີສອງ. ສະນັ້ນ ບໍ່ມີຜູ້ອະທິບາຍພຣະຄຳພີ ຫຼື ຜູ້ທຳນາຍໃດກ້າທີ່ຈະທຳນາຍຢ່າງຊັດເຈນວ່າ ພຣະເຈົ້າຈະບັງເກີດເປັນມະນຸດອີກຄັ້ງໃນຍຸກສຸດທ້າຍ ເຊິ່ງກໍຄືພຣະອົງຈະມາຢູ່ໃນເນື້ອໜັງອີກຄັ້ງເພື່ອປະຕິບັດສ່ວນທີສອງຂອງພາລະກິດຂອງພຣະອົງໃນເນື້ອໜັງ ຄືວ່າ ພຣະອົງຈະມາໃນເນື້ອໜັງອີກຄັ້ງເພື່ອປະຕິບັດພາກສ່ວນທີສອງຂອງພາລະກິດຂອງພຣະອົງໃນເນື້ອໜັງ. ສະນັ້ນ ບໍ່ມີໃຜຮູ້ວ່າ ພຣະເຈົ້າໄດ້ເຊື່ອງຕົນເອງໃນເນື້ອໜັງແຕ່ດົນມາແລ້ວ. ບໍ່ແປກເລີຍ ເພາະພຽງແຕ່ຫຼັງຈາກທີ່ພຣະເຢຊູຟື້ນຄືນຊີບ ແລະ ຖືກຍົກຂຶ້ນສູ່ສະຫວັນ, ພຣະອົງຈຶ່ງຍອມຮັບການມອບໝາຍນີ້ ເຊິ່ງດ້ວຍເຫດນັ້ນ ຈຶ່ງບໍ່ມີຄຳທຳນາຍທີ່ຊັດເຈນກ່ຽວກັບການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າ ແລະ ບໍ່ສາມາດປະເມີນໄດ້ໃນຈິດໃຈຂອງມະນຸດ. ໃນໜັງສືແຫ່ງການທຳນາຍທັງຫຼາຍໃນພຣະຄຳພີ ແມ່ນບໍ່ມີຄຳເວົ້າທີ່ກ່າວເຖິງສິ່ງນີ້ຢ່າງຊັດເຈນ. ແຕ່ໃນເວລາທີ່ພຣະເຢຊູມາປະຕິບັດພາລະກິດແມ່ນໄດ້ມີການທຳນາຍທີ່ຊັດເຈນແລ້ວ ທີ່ກ່າວວ່າສາວບໍລິສຸດຈະມີລູກ ແລະ ຈະໃຫ້ກຳເນີດບຸດຊາຍ ເຊິ່ງໝາຍຄວາມວ່າໄດ້ມີການຕັ້ງຄັນພຣະອົງຜ່ານພຣະວິນຍານບໍລິສຸດ. ເຖິງຢ່າງໃດກໍຕາມ, ພຣະເຈົ້າຍັງເວົ້າວ່າ ສິ່ງນີ້ເກີດຂຶ້ນໂດຍມີຄວາມສ່ຽງຕໍ່ຄວາມຕາຍ ແລ້ວໃນປັດຈຸບັນມັນຈະສ່ຽງຫຼາຍກວ່າເທົ່າໃດ? ບໍ່ຕ້ອງສົງໄສເລີຍທີ່ພຣະເຈົ້າກ່າວວ່າ ການບັງເກີດເປັນມະນຸດຄັ້ງນີ້ສ່ຽງຕໍ່ອັນຕະລາຍກວ່າທີ່ຢູ່ໃນລະຫວ່າງຍຸກແຫ່ງພຣະຄຸນເປັນຫຼາຍພັນເທົ່າ. ໃນຫຼາຍບ່ອນ, ພຣະເຈົ້າໄດ້ທຳນາຍວ່າ ພຣະອົງຈະໄດ້ຮັບເອົາກຸ່ມຜູ້ເອົາຊະນະໃນດິນແດນຊີນິມ. ໃນເມື່ອມັນຢູ່ໃນພາກຕະເວັນອອກຂອງແຜ່ນດິນໂລກທີ່ຜູ້ເອົາຊະນະຖືກຮັບເອົາ, ສະນັ້ນ ບ່ອນທີ່ພຣະເຈົ້າສະເດັດມາໃນການບັງເກີດເປັນມະນຸດຄັ້ງທີສອງແມ່ນດິນແດນຊີນິມໂດຍບໍ່ຕ້ອງສົງໄສເລີຍ ເຊິ່ງເປັນບ່ອນດຽວກັນທີ່ມັງກອນແດງໃຫຍ່ນອນຂົດຢູ່. ໃນບ່ອນນັ້ນ ພຣະເຈົ້າຈະຮັບເອົາເຊື້ອສາຍຂອງມັງກອນແດງໃຫຍ່ ເພື່ອວ່າມັນຈະຖືກເອົາຊະນະ ແລະ ຖືກເຮັດໃຫ້ອັບອາຍແທ້ໆ. ພຣະເຈົ້າຕ້ອງການປຸກຄົນເຫຼົ່ານີ້ທີ່ທົນທຸກຫຼາຍ, ປຸກພວກເຂົາຈົນພວກເຂົາຕື່ນໝົດ ແລະ ເຮັດໃຫ້ພວກເຂົາຍ່າງອອກຈາກໝອກ ແລະ ປະຕິເສດມັງກອນແດງໃຫຍ່. ພວກເຂົາຈະຕື່ນຈາກຄວາມຝັນຂອງພວກເຂົາ, ຮູ້ຈັກທາດແທ້ຂອງມັງກອນແດງໃຫຍ່, ສາມາດມອບຫົວໃຈທັງໝົດຂອງພວກເຂົາໃຫ້ກັບພຣະເຈົ້າ, ລຸກຂຶ້ນຈາກການກົດຂີ່ຂອງອິດທິພົນມືດ, ຢືນຂຶ້ນໃນພາກຕະເວັນອອກຂອງໂລກ ແລະ ກາຍເປັນຫຼັກຖານແຫ່ງໄຊຊະນະຂອງພຣະເຈົ້າ. ດ້ວຍວິທີນີ້ເທົ່ານັ້ນ ພຣະເຈົ້າຈຶ່ງຈະໄດ້ຮັບຄວາມສະຫງ່າລາສີ. ຍ້ອນເຫດຜົນນີ້ເທົ່ານັ້ນ, ພຣະເຈົ້າຈຶ່ງນຳພາລະກິດທີ່ຈົບລົງໃນອິດສະຣາເອນໄປສູ່ດິນແດນທີ່ມັງກອນແດງໃຫຍ່ນອນຂົດ ແລະ ເປັນເວລາເກືອບສອງພັນປີຫຼັງຈາກການຈາກໄປ

ພຣະເຈົ້າກໍໄດ້ມາຢູ່ໃນເນື້ອໜັງອີກຄັ້ງເພື່ອສືບຕໍ່ພາລະກິດໃນຍຸກແຫ່ງພຣະຄຸນ. ໃນສາຍຕາເປົ່າຂອງມະນຸດ, ພຣະເຈົ້າກໍາລັງເລີ່ມຕົ້ນພາລະກິດໃໝ່ໃນເນື້ອໜັງ. ແຕ່ໃນມຸມມອງຂອງພຣະເຈົ້າແລ້ວ, ພຣະອົງກໍາລັງສືບຕໍ່ພາລະກິດໃນຍຸກແຫ່ງພຣະຄຸນ ແຕ່ຫຼັງຈາກໄລຍະເວລາທີ່ບໍ່ມີຜູ້ປົກຄອງເປັນເວລາສອງພັນປີເທົ່ານັ້ນ ແລະ ໂດຍທີ່ມີການປ່ຽນແປງສະຖານທີ່ ແລະ ໂຄງການປະຕິບັດພາລະກິດຂອງພຣະອົງເທົ່ານັ້ນ. ເຖິງແມ່ນວ່າຮູບລັກທີ່ຮ່າງກາຍທີ່ເປັນເນື້ອໜັງໄດ້ສວມໃສ່ໃນພາລະກິດປັດຈຸບັນຈະປາກົດວ່າແຕກຕ່າງຈາກພຣະເຢຊູຢ່າງສິ້ນເຊີງ, ແຕ່ທັງສອງກໍມາຈາກແກ່ນແທ້ ແລະ ຮາກຖານອັນດຽວກັນ ແລະ ທັງສອງກໍມາຈາກບໍ່ເກີດດຽວກັນ. ບາງເທື່ອ ພຣະອົງທັງສອງມີຄວາມແຕກຕ່າງກັນຫຼາຍໃນພາຍນອກ ແຕ່ຄວາມຈິງພາຍໃນຂອງພາລະກິດຂອງພຣະອົງທັງສອງກໍຄືກັນທັງໝົດ. ບໍ່ວ່າຢ່າງໃດກໍຕາມ, ຍຸກຕ່າງໆກໍແຕກຕ່າງກັນຄືກັບກາງຄືນ ແລະ ກາງເວັນ. ແລ້ວພາລະກິດຂອງພຣະເຈົ້າຍັງຈະເປັນໄປຕາມຮູບແບບທີ່ບໍ່ປ່ຽນແປງໄດ້ແນວໃດ? ຫຼື ຂັ້ນຕອນທີ່ແຕກຕ່າງຂອງພາລະກິດຂອງພຣະອົງຈະລົບກວນກັນໄດ້ແນວໃດ?

ພຣະເຢຊູມີລັກສະນະຂອງຊາວຢິວ, ສວມໃສ່ເຄື່ອງແຕ່ງຕົວຕາມຊາວຢິວ ແລະ ເຕີບໃຫຍ່ໂດຍກິນອາຫານຂອງຊາວຢິວ. ນີ້ແມ່ນລັກສະນະທໍາມະດາຂອງຄວາມເປັນມະນຸດຂອງພຣະອົງ. ແຕ່ເນື້ອໜັງທີ່ບັງເກີດເປັນມະນຸດໃນປັດຈຸບັນມີຮູບຮ່າງຂອງຄົນອາຊີ ແລະ ເຕີບໂຕໃນປະເທດຊາດຂອງມັງກອນແດງໃຫຍ່. ສິ່ງເຫຼົ່ານີ້ບໍ່ໄດ້ຂັດກັບເປົ້າໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ກົງກັນຂ້າມ, ພວກມັນເສີມສ້າງກັນ ໂດຍເຮັດໃຫ້ຄວາມໝາຍທີ່ແທ້ຈິງຂອງການບັງເກີດເປັນມະນຸດຂອງພຣະເຈົ້າສໍາເລັດລົງຢ່າງສົມບູນ. ເພາະເນື້ອໜັງທີ່ບັງເກີດເປັນມະນຸດແມ່ນໝາຍເຖິງ “ພຣະບຸດຂອງມະນຸດ” ຫຼື “ພຣະຄຣິດ”, ລັກສະນະພາຍນອກຂອງພຣະຄຣິດໃນປັດຈຸບັນຈຶ່ງບໍ່ສາມາດທຽບເທົ່າໄດ້ກັບພຣະເຢຊູຄຣິດ. ຢ່າງໃດກໍຕາມ, ເນື້ອໜັງນີ້ຖືກເອີ້ນວ່າ “ພຣະບຸດຂອງມະນຸດ” ແລະ ຢູ່ໃນລັກສະນະຂອງເນື້ອໜັງ. ທຸກຂັ້ນຕອນຂອງພາລະກິດຂອງພຣະເຈົ້າປະກອບມີຄວາມໝາຍທີ່ເລິກເຊິ່ງຫຼາຍ. ເຫດຜົນທີ່ພຣະວິນບໍລິສຸດຕັ້ງຄັນພຣະເຢຊູກໍຍ້ອນພຣະອົງຕ້ອງໄຖ່ຄົນບາບ. ພຣະອົງຕ້ອງປາສະຈາກຄວາມບາບ. ແຕ່ໃນເວລາສຸດທ້າຍເທົ່ານັ້ນ ເມື່ອພຣະອົງຖືກບັງຄັບໃຫ້ກາຍເປັນລັກສະນະຂອງເນື້ອໜັງທີ່ມີບາບ ແລະ ຮັບເອົາຄວາມບາບຂອງຄົນບາບ, ພຣະອົງຈຶ່ງຊ່ວຍຊີວິດພວກເຂົາຈາກໄມ້ກາງແຂນທີ່ຖືກສາບແຊ່ງທີ່ພຣະເຈົ້າໃຊ້ເພື່ອຂ້ຽນຕີຜູ້ຄົນ. (ໄມ້ກາງແຂນແມ່ນເຄື່ອງມືຂອງພຣະເຈົ້າສໍາລັບສາບແຊ່ງ ແລະ ຂ້ຽນຕີມະນຸດ; ເມື່ອໃດກໍຕາມທີ່ມີການກ່າວເຖິງການສາບແຊ່ງ ແລະ ການຂ້ຽນຕີ, ມັນກໍໝາຍເຖິງຄົນບາບໂດຍສະເພາະ). ເປົ້າໝາຍແມ່ນເພື່ອເຮັດໃຫ້ຄົນບາບທຸກຄົນກັບໃຈ ແລະ ໃຊ້ການຖືກຄຶງເທິງໄມ້ກາງແຂນເພື່ອເຮັດໃຫ້ພວກເຂົາຍອມຮັບເອົາຄວາມບາບຂອງພວກເຂົາ. ນັ້ນກໍຄືເພື່ອການໄຖ່ມະນຸດຊາດທັງປວງ, ພຣະເຈົ້າຈຶ່ງບັງເກີດເປັນມະນຸດໃນເນື້ອໜັງທີ່ຖືກຕັ້ງຄັນໂດຍພຣະວິນຍານບໍລິສຸດ ແລະ ຮັບເອົາຄວາມບາບຂອງມະນຸດຊາດທັງປວງດ້ວຍຕົວພຣະອົງເອງ. ເພື່ອທີ່ຈະບັນລະຍາຍເຖິງສິ່ງນີ້ຕາມພາສາທີ່ໃຊ້ກັນທຸກມື້, ພຣະອົງໄດ້ມອບຮ່າງກາຍທີ່ເປັນເນື້ອໜັງທີ່ບໍລິສຸດເພື່ອແລກປ່ຽນກັບຄົນບາບທຸກຄົນ ເຊິ່ງທຽບເທົ່າກັບການທີ່ພຣະເຢຊູເປັນ “ເຄື່ອງບູຊາໄຖ່ບາບ” ທີ່

ຖືກວາງໄວ້ຢູ່ຕໍ່ໜ້າຊາຕານເພື່ອ "ອ້ອນວອນ" ຊາຕານໃຫ້ເອົາມະນຸດຊາດທັງປວງທີ່ໄຮ້ດຽງສາທີ່ມັນໄດ້ຢຽບຢໍ່າ ແລະ ມອບພວກເຂົາຄືນໃຫ້ກັບພຣະເຈົ້າ. ນີ້ຄືເຫດຜົນວ່າເປັນຫຍັງການຕັ້ງຄັນໂດຍພຣະວິນຍານບໍລິສຸດຈຶ່ງຈຳເປັນຕໍ່ການສຳເລັດຂັ້ນຕອນນີ້ຂອງພາລະກິດແຫ່ງການໄຖ່ບາບ. ນີ້ແມ່ນເງື່ອນໄຂທີ່ຈຳເປັນ ເຊິ່ງກໍຄື "ສົນທິສັນຍາເພື່ອຄວາມສະຫງົບ" ໃນສົງຄາມລະຫວ່າງພຣະເຈົ້າພຣະບິດາ ແລະ ຊາຕານ. ນັ້ນຄືເຫດຜົນທີ່ວ່າ ຫຼັງຈາກທີ່ພຣະເຢຊູຖືກມອບໃຫ້ກັບຊາຕານ ຂັ້ນຕອນນີ້ຂອງພາລະກິດຈຶ່ງສຳເລັດລົງ. ເຖິງຢ່າງໃດກໍຕາມ, ພາລະກິດແຫ່ງການໄຖ່ຂອງພຣະເຈົ້າໃນປັດຈຸບັນໄດ້ບັນລຸຄວາມໃຫຍ່ໂຕເຊິ່ງບໍ່ເຄີຍມີມາກ່ອນ ແລະ ຊາຕານກໍບໍ່ມີເຫດຜົນທີ່ຈະຮຽກຮ້ອງ ເຊິ່ງດ້ວຍເຫດນັ້ນພຣະວິນຍານບໍລິສຸດຈຶ່ງບໍ່ຈຳເປັນຕ້ອງຕັ້ງຄັນພຣະເຈົ້າເພື່ອໃຫ້ບັງເກີດເປັນມະນຸດ. ຍ້ອນພຣະເຈົ້າບໍລິສຸດ ແລະ ໄຮ້ດຽງສາໂດຍທຳມະຊາດ, ພຣະເຈົ້າທີ່ບັງເກີດເປັນມະນຸດນີ້ຈຶ່ງບໍ່ແມ່ນພຣະເຢຊູຂອງຍຸກແຫ່ງພຣະກະລຸນາອີກຕໍ່ໄປ. ແຕ່ຢ່າງໃດກໍຕາມ, ພຣະອົງຍັງບັງເກີດເປັນມະນຸດເພື່ອຄວາມປະສົງຂອງພຣະເຈົ້າພຣະບິດາ ແລະ ເພື່ອເຮັດໃຫ້ຄວາມປາຖະໜາຂອງພຣະເຈົ້າພຣະບິດາສຳເລັດລົງ. ນີ້ບໍ່ແມ່ນວິທີທາງທີ່ບໍ່ສົມເຫດສົມຜົນໃນການອະທິບາຍສິ່ງຕ່າງໆຢ່າງແນ່ນອນບໍ? ການບັງເກີດເປັນມະນຸດຂອງພຣະເຈົ້າຕ້ອງປະຕິບັດຕາມຊຸດກົດລະບຽບບໍ?

ຫຼາຍຄົນຊອກເບິ່ງໃນພຣະຄຳພີເພື່ອຫາຫຼັກຖານ ໂດຍຫວັງວ່າຈະຄົ້ນພົບຄຳທຳນາຍກ່ຽວກັບການບັງເກີດເປັນມະນຸດຂອງພຣະເຈົ້າ. ມະນຸດທີ່ມີຄວາມຄິດທີ່ສັບສົນ ແລະ ແຕກຫັກຈະສາມາດຮູ້ໄດ້ແນວໃດວ່າພຣະເຈົ້າໄດ້ເຊົາ "ປະຕິບັດພາລະກິດ" ໃນພຣະຄຳພີເປັນເວລາດົນແລ້ວ ແລະ ໄດ້ "ໂດດ" ອອກຈາກຂອບເຂດຂອງພຣະຄຳພີເພື່ອປະຕິບັດພາລະກິດທີ່ພຣະອົງໄດ້ວາງແຜນທີ່ຈະເຮັດມາແຕ່ດົນດ້ວຍຄວາມມ່ວນຊື່ນຢ່າງເຖິງໃຈ ແຕ່ພຣະອົງບໍ່ເຄີຍບອກມະນຸດຈັກເທື່ອ? ຜູ້ຄົນຂາດເຫດຜົນຫຼາຍເກີນໄປ. ຫຼັງຈາກທີ່ຊີມລົດຊາດອຸປະນິໄສຂອງພຣະເຈົ້າພຽງແຕ່ໜ້ອຍໜຶ່ງ, ພວກເຂົາກໍຂຶ້ນໄປເທິງເວທີສູງ ແລະ ນັ່ງເທິງ "ລົດລໍ້" ຊັ້ນສູງຢ່າງບໍ່ສົນໃຈຫຍັງເລີຍ ເພື່ອກວດສອບພາລະກິດຂອງພຣະເຈົ້າໄປໄກຈົນເຖິງກັບເລີ່ມສັ່ງສອນພຣະເຈົ້າດ້ວຍການສົນທະນາທີ່ອວດໂອ້ ແລະ ຍືດຍາວກ່ຽວກັບທຸກສິ່ງທີ່ຢູ່ກ້ອງດວງຕາເວັນ. ມີຫຼາຍຄັ້ງທີ່ "ຊາຍເຖົ້າ" ໃສ່ແວ່ນຕາສຳລັບອ່ານໜັງສື ແລະ ລູບໜວດຂອງເຂົາແລ້ວເປີດ "ກາລານຸກົມເກົ່າ" (ພຣະຄຳພີ) ຂອງເຂົາທີ່ມີໜ້າສີເຫຼືອງທີ່ເຂົາໄດ້ອ່ານຊົ່ວຊີວິດ. ເມື່ອຈົ່ມພຶມພໍາ ແລະ ມີສາຍຕາເບິ່ງຄືວ່າເຫຼື້ອມແວວວາວດ້ວຍຈິດວິນຍານ, ບັດນີ້ ເຂົາກໍຫັນໄປທີ່ໜັງສືພຣະນິມິດ ແລະ ບັດນີ້ກໍໄປທີ່ໜັງສືດານີເອນ ແລະ ບັດນີ້ກໍເປັນທີ່ໜັງສືເອຊາຢາ ເຊິ່ງເປັນທີ່ຮູ້ຈັກກັນທົ່ວໄປ. ເມື່ອຈ້ອງເບິ່ງແຕ່ລະໜ້າເຈ້ຍທີ່ເຕັມໄປດ້ວຍຕົວໜັງສືນ້ອຍໆ, ເຂົາກໍອ່ານຢູ່ໃນໃຈ, ຄວາມຄິດຂອງເຂົາປັ່ນໝູນໂດຍບໍ່ເຊົາຈັກເທື່ອ. ທັນໃດນັ້ນ ມືທີ່ລູບໜວດກໍຢຸດ ແລະ ເລີ່ມດຶງໜວດຂອງລາວ. ຄັ້ງແລ້ວຄັ້ງເລົ່າ ຄົນເຮົາກໍຈະໄດ້ຍິນສຽງໜວດຂາດ. ພຶດຕິກຳທີ່ແປກປະຫຼາດດັ່ງກ່າວເຮັດໃຫ້ຄົນເຮົາມຶນງົງ. "ເປັນຫຍັງຕ້ອງໃຊ້ແຮງແບບນັ້ນ? ເປັນຫຍັງລາວຈຶ່ງໃຈຮ້າຍຫຼາຍ?" ເມື່ອເບິ່ງກັບຄືນໄປທີ່ຊາຍເຖົ້າ ພວກເຮົາກໍເຫັນວ່າຕອນນີ້ຄິ້ວຂອງລາວກໍຕັ້ງຂຶ້ນ. ໃນຂະນະທີ່ຊາຍເຖົ້າສືບຕໍ່ຈ້ອງເບິ່ງໜ້າເຈ້ຍທີ່ເບິ່ງຄືກັບວ່າເກົ່າໂດຍບໍ່ເວັ້ນສາຍຕາ ຄິ້ວງອກໄດ້ຫຼົ່ນລົງຄືກັບຂົນຫ່ານທີ່ຫ່າງຈາກໜັງຕາ

ຂອງຊາຍເຖົ້າສອງຊັ້ງຕີແມັດ ຄືກັບວ່າບັງເອີນ ແຕ່ກໍລືມບູນຫຼາຍ. ຫຼັງຈາກເຮັດແບບນັ້ນຊໍ້າໄປຊໍ້າມາຫຼາຍຄັ້ງ, ເຂົາກໍບໍ່ສາມາດເຮັດຫຍັງໄດ້ ນອກຈາກໂດດຂຶ້ນ ແລະ ເລີ່ມເວົ້າຂຶ້ນຄືກັບວ່າລົມກັນເລື່ອງບໍ່ສຳຄັນ[3] ກັບຄົນອື່ນ, ເຖິງແມ່ນວ່າແສງສະຫວ່າງຈາກຕາຂອງເຂົາຍັງບໍ່ໄດ້ຢຸດເບິ່ງປ່ອຍອອກຈາກກາລານຸກົມ. ທັນໃດນັ້ນ ເຂົາກໍປິດໜ້າປັດຈຸບັນ ແລະ ເປີດໄປ "ໂລກອີກໃບໜຶ່ງ". ການເຄື່ອນໄຫວຂອງເຂົາຟ້າວຟັ່ງ[4] ແລະ ຢ້ານຫຼາຍ ຈົນເກືອບເຮັດໃຫ້ຄົນອື່ນຕົກໃຈ. ໃນເວລານີ້, ໜູທີ່ໄດ້ອອກຈາກຮູຂອງມັນ ແລະ ຫາກໍເລີ່ມຮູ້ສຶກຜ່ອນຄາຍເຊິ່ງພຽງພໍທີ່ຈະເຮັດໃຫ້ມັນເຄື່ອນໄຫວຢ່າງເປັນອິດສະຫຼະ ໃນລະຫວ່າງຄວາມງຽບຂອງເຂົາ ກໍໄດ້ຕົກໃຈຍ້ອນການເຄື່ອນໄຫວທີ່ບໍ່ປົກກະຕິຂອງເຂົາ ຈົນມັນແລ່ນກັບເຂົ້າໄປໃນຮູ ແລະ ຫາຍໄປໂດຍບໍ່ເຫຼືອຮ່ອງຮອຍ ໂດຍບໍ່ປາກົດອອກມາອີກເລີຍ. ບັດນີ້ ມືຊ້າຍທີ່ບໍ່ເຄື່ອນໜັງຂອງຊາຍເຖົ້າກໍສືບຕໍ່ລູບໜວດຂຶ້ນໆລົງໆ. ເຂົາຍັບອອກຈາກບ່ອນນັ່ງ ໂດຍປະປຶ້ມໄວ້ເທິງໂຕະ. ລົມເຂົ້າມາຜ່ານຮອຍແຕກຂອງປະຕູ ແລະ ປ່ອງຢ້ຽມທີ່ເປີດໄວ້ ໂດຍພັດປຶ້ມແຮງໆໃຫ້ປິດໄວ້ແລ້ວກໍເປີດອີກຄັ້ງ. ມີຄວາມໂດດດ່ຽວເຫງົາຫງອຍກ່ຽວກັບສາກດັ່ງກ່າວ ແລະ ນອກຈາກສຽງໜ້າເຈ້ຍຂອງປຶ້ມທີ່ພັດໄປມາໂດຍສາຍລົມ, ທຸກສິ່ງເບິ່ງຄືກັບວ່າງຽບລົງ. ດ້ວຍມືເກາະກັນຢູ່ຫຼັງຂອງເຂົາ, ເຂົາກໍຍ່າງໄປມາໃນຫ້ອງ, ແລ້ວກໍຢຸດ, ແລ້ວກໍເລີ່ມ, ແກວ່ງຫົວຄັ້ງແລ້ວຄັ້ງເລົ່າ ແລະ ໃນປາກຂອງເຂົາກໍຄືກັບວ່າເຂົາເວົ້າຊໍ້າແລ້ວອີກວ່າ "ໂອ! ພຣະເຈົ້າເອີຍ! ພຣະອົງຈະເຮັດແບບນັ້ນແທ້ໆບໍ?" ຄັ້ງແລ້ວຄັ້ງເລົ່າ ເຂົາຍັງງຶກຫົວພ້ອມກັບເວົ້າວ່າ "ໂອ ພຣະເຈົ້າເອີຍ! ຜູ້ໃດສາມາດຢັ່ງຮູ້ພາລະກິດຂອງພຣະອົງ? ມັນບໍ່ຍາກບໍທີ່ຈະຄົ້ນຫາຮອຍພຣະບາດຂອງພຣະອົງ? ຂ້ານ້ອຍເຊື່ອວ່າພຣະອົງຈະບໍ່ເຮັດສິ່ງຕ່າງໆເພື່ອໃຫ້ມີຄວາມຫຍຸ້ງຍາກໂດຍທີ່ບໍ່ມີເຫດຜົນ". ໃນເວລານີ້, ຊາຍເຖົ້າກໍຫຍໍ້ຄິ້ວຂອງເຂົາເຂົ້າກັນ ແລະ ລັບຕາຂອງລົງ ໂດຍສະແດງລັກສະນະທີ່ເປັນຕາອາຍ ແລະ ລັກສະນະທີ່ເຈັບປວດເປັນຢ່າງຍິ່ງ ຄືກັບວ່າເຂົາກຳລັງຈະເຮັດການຄຳນວນຢ່າງຊ້າໆ ແລະ ໂດຍເຈດຕະນາ. ຊາຍເຖົ້າທີ່ໜ້າສົງສານເອີຍ! ຫຼັງຈາກໄດ້ດຳລົງຊີວິດມາຕະຫຼອດຊີວິດຂອງເຂົາ ແລ້ວຫຼັງຈາກນັ້ນກໍ "ໂຊກຮ້າຍ" ມາພົບພໍ້ບັນຫານີ້ຈົນຊ້າຫຼາຍ. ສາມາດເຮັດຫຍັງໄດ້ກັບບັນຫານີ້? ເຮົາກໍເຮັດຫຍັງບໍ່ຖືກ ແລະ ບໍ່ມີອຳນາດທີ່ຈະເຮັດຫຍັງໄດ້ເຊັ່ນກັນ. ຜູ້ໃດຈະໂທດວ່າກາລານຸກົມເກົ່າຂອງເຂົາກາຍເປັນສີເຫຼືອງ? ຜູ້ໃດຈະໂທດວ່າໜວດ ແລະ ຄິ້ວຂອງເຂົາກາຍເປັນຄືກັບຫິມະສີຂາວທີ່ຢູ່ໃນຈຸດຕ່າງໆເທິງໃບໜ້າຂອງເຂົາຢ່າງໂຫດຮ້າຍ? ມັນເປັນຄືກັບວ່າໜວດຂອງເຂົາເປັນຕົວແທນໃຫ້ກັບຄວາມອາວຸໂສຂອງເຂົາ. ແຕ່ຜູ້ໃດຈະຮູ້ວ່າມະນຸດໂງ່ຈ້າເຖິງລະດັບທີ່ວ່າເຂົາຈະຊອກຫາການສະຖິດຂອງພຣະເຈົ້າໃນກາລານຸກົມເກົ່າໆ? ມີແຜ່ນເຈ້ຍຫຼາຍສໍ່າໃດທີ່ກາລານຸກົມເກົ່າສາມາດມີໄດ້? ມັນສາມາດບັນທຶກການກະທຳທຸກຢ່າງຂອງພຣະເຈົ້າດ້ວຍຄວາມຖືກຕ້ອງຢ່າງຄົບຖ້ວນແທ້ໆບໍ? ຜູ້ໃດກ້າຮັບປະກັນສິ່ງນັ້ນໄດ້? ທີ່ຈິງແລ້ວ ມະນຸດຄິດທີ່ຈະ

3 "ລົມກັນເລື່ອງບໍ່ສຳຄັນ" ແມ່ນການອຸປະມາເຖິງໃບໜ້າທີ່ຂີ້ຮ້າຍຂອງຜູ້ຄົນ ເມື່ອພວກເຂົາຄົ້ນຄວ້າພາລະກິດຂອງພຣະເຈົ້າ.

4 "ຟ້າວຟັ່ງ" ໝາຍເຖິງການເຄື່ອນໄຫວທີ່ຮ້ອນຮົນ ແລະ ຮີບດ່ວນຂອງ "ຊາຍເຖົ້າ" ເມື່ອເຂົາເບິ່ງພຣະຄຳພີ.

ສະແຫວງຫາການປາກົດຕົວຂອງພຣະເຈົ້າ ແລະ ເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າໂດຍກະຈາຍຄຳຕາມຫຼັກໄວຍາກອນ ແລະ ແຍກຄວາມແຕກຕ່າງໃນສິ່ງເລັກນ້ອຍ[5] ໂດຍຫວັງທີ່ຈະເຂົ້າສູ່ຊີວິດ. ການພະຍາຍາມເຂົ້າສູ່ຊີວິດແບບນີ້ງ່າຍສໍ່າທີ່ເຈົ້າໄດ້ຍິນບໍ? ສິ່ງນີ້ບໍ່ແມ່ນການໃຫ້ເຫດຜົນທີ່ບໍ່ຖືກຕ້ອງບໍ ກ່ຽວກັບປະເພດທີ່ຜິດປົກກະຕິຢ່າງໄຮ້ສາລະທີ່ສຸດ? ເຈົ້າບໍ່ພົບວ່າສິ່ງນີ້ເປັນສິ່ງທີ່ເປັນຕາຫົວບໍ?

5 "ກະຈາຍຄຳຕາມຫຼັກໄວຍາກອນ ແລະ ແຍກຄວາມແຕກຕ່າງໃນສິ່ງເລັກນ້ອຍ" ແມ່ນໃຊ້ເພື່ອເຍະເຍີ້ຍຜູ້ຊ່ຽວຊານໃນຄວາມເຊື່ອຜິດ ເຊິ່ງແມ່ນຜູ້ທີ່ວິເຄາະພຣະທຳ ແຕ່ບໍ່ສະແຫວງຫາຄວາມຈິງ ຫຼື ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ.

# ພາລະກິດ ແລະ ທາງເຂົ້າ (7)

ມະນຸດໄດ້ໃຊ້ເວລາຈົນເຖິງປັດຈຸບັນຈຶ່ງຮູ້ວ່າ ສິ່ງທີ່ມະນຸດຂາດຫາຍໄປນັ້ນບໍ່ແມ່ນພຽງແຕ່ການສະໜອງຊີວິດທາງຈິດວິນຍານ ແລະ ປະສົບການໃນການຮູ້ຈັກພຣະເຈົ້າເທົ່ານັ້ນ ແຕ່ສຳຄັນໄປກວ່ານັ້ນ ແມ່ນການປ່ຽນແປງອຸປະນິໄສຂອງພວກເຂົາ. ເນື່ອງຈາກມະນຸດບໍ່ມີຄວາມຮູ້ຢ່າງສິ້ນເຊີງກ່ຽວກັບປະຫວັດສາດ ແລະ ວັດທະນະທຳບູຮານຂອງເຊື້ອຊາດຕົນເອງ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວກ່ຽວກັບພາລະກິດຂອງພຣະເຈົ້າ. ມະນຸດຫວັງຢ່າງເລິກໆໃນໃຈວ່າມະນຸດຈະສາມາດຕິດພັນກັບພຣະເຈົ້າ ແຕ່ເນື່ອງຈາກວ່າເນື້ອໜັງຂອງມະນຸດເສື່ອມຊາມຫຼາຍເກີນໄປພ້ອມກັບການຕາຍດ້ານ ແລະ ຄວາມໂງ່ຈ້າ, ສິ່ງນີ້ຈຶ່ງເຮັດໃຫ້ເຂົາບໍ່ມີຄວາມຮູ້ຫຍັງເລີຍກ່ຽວກັບພຣະເຈົ້າ. ພຣະເຈົ້າສະເດັດມາໃນທ່າມກາງມະນຸດໃນປັດຈຸບັນ ເພື່ອຈຸດປະສົງໃນການປ່ຽນແປງຄວາມຄິດ ແລະ ຈິດວິນຍານຂອງຜູ້ຄົນ ພ້ອມກັບພາບລັກຂອງພຣະເຈົ້າໃນຫົວໃຈຂອງພວກເຂົາທີ່ພວກເຂົາມີເປັນເວລາຫຼາຍລ້ານປີ. ພຣະອົງຈະຖືເອົາໂອກາດນີ້ເຮັດໃຫ້ມະນຸດສົມບູນ. ນັ້ນກໍຄື ພຣະອົງຈະປ່ຽນວິທີທີ່ພວກເຂົາຮູ້ຈັກພຣະອົງ ແລະ ປ່ຽນທັດສະນະຄະຕິຂອງພວກເຂົາທີ່ມີຕໍ່ພຣະອົງໂດຍຜ່ານຄວາມຮູ້ຂອງມະນຸດ, ເຮັດໃຫ້ມະນຸດສ້າງຈຸດເລີ່ມຕົ້ນໃໝ່ໃນການມາຮູ້ຈັກພຣະເຈົ້າຢ່າງມີໄຊຊະນະ ແລະ ດ້ວຍວິທີນີ້ ຈຶ່ງຈະບັນລຸການເລີ່ມຕົ້ນໃໝ່ ແລະ ການປ່ຽນແປງຈິດວິນຍານຂອງມະນຸດ. ການຈັດການ ແລະ ການລົງວິໄນແມ່ນວິທີການ, ໃນຂະນະທີ່ການເອົາຊະນະ ແລະ ການເລີ່ມຕົ້ນໃໝ່ແມ່ນເປົ້າໝາຍ. ການກຳຈັດຄວາມຄິດແບບງົມງວາຍທີ່ມະນຸດມີກ່ຽວກັບພຣະເຈົ້າເລື່ອນລອຍແມ່ນເປັນເຈດຕະນາຂອງພຣະເຈົ້າມາຕະຫຼອດ ແລະ ໃນບໍ່ດົນມານີ້ກໍໄດ້ກາຍເປັນປະເດັນສຸກເສີນຂອງພຣະອົງ. ຫວັງວ່າທຸກຄົນຈະເບິ່ງຢ່າງລະອຽດໃນການຄຳນຶງເຖິງສະຖານະການນີ້. ປ່ຽນວິທີທີ່ແຕ່ລະຄົນມີປະສົບການ ເພື່ອວ່າ ເຈດຕະນາອັນຮີບດ່ວນນີ້ຂອງພຣະເຈົ້າອາດຈະເກີດໝາກຜົນໂດຍໄວ ແລະ ເພື່ອວ່າ ຂັ້ນຕອນສຸດທ້າຍແຫ່ງພາລະກິດຂອງພຣະອົງເທິງແຜ່ນດິນໂລກອາດຈະນຳໄປສູ່ຄວາມສຳເລັດຢ່າງສົມບູນ. ຈົ່ງມອບຄວາມຈົງຮັກພັກດີທີ່ເຈົ້າສົມຄວນມອບໃຫ້ກັບພຣະເຈົ້າ ແລະ ຈົ່ງປອບໃຈພຣະເຈົ້າເປັນເທື່ອສຸດທ້າຍ. ຫວັງວ່າໃນທ່າມກາງອ້າຍເອື້ອຍນ້ອງ ຈະບໍ່ມີຜູ້ໃດໜີຄວາມຮັບຜິດຊອບນີ້ ຫຼື ພຽງແຕ່ເຮັດພໍເປັນພິທີ. ພຣະເຈົ້າສະເດັດມາໃນເນື້ອໜັງໃນຄັ້ງນີ້ແມ່ນເພື່ອສະໜອງຕໍ່ຄຳເຊື້ອເຊີນ ແລະ ຍ້ອນສະພາບຂອງມະນຸດ. ນັ້ນກໍຄື ພຣະອົງສະເດັດມາ ເພື່ອສະໜອງໃຫ້ແກ່ມະນຸດດ້ວຍສິ່ງທີ່ມະນຸດຕ້ອງການ. ບໍ່ວ່າມະນຸດຈະມີຄວາມສາມາດ ຫຼື ໄດ້ຮັບການລ້ຽງດູມາແບບໃດກໍຕາມ ສຸດທ້າຍພຣະອົງຈະເຮັດໃຫ້ເຂົາສາມາດເຫັນພຣະທຳຂອງພຣະເຈົ້າ, ຜ່ານພຣະທຳຂອງພຣະອົງ ຈະເຮັດໃຫ້ເຫັນການມີຢູ່ ແລະ ການສະແດງອອກຂອງພຣະເຈົ້າ ແລະ ຍອມຮັບເອົາການທີ່ພຣະເຈົ້າເຮັດໃຫ້ເຂົາສົມບູນ, ປ່ຽນແປງຄວາມຄິດ ແລະ ແນວຄວາມຄິດຂອງມະນຸດ ເພື່ອວ່າ ໃບໜ້າດັ່ງເດີມຂອງພຣະເຈົ້າຈະຖືກຝັງເລິກລົງໃນຫົວໃຈຂອງມະນຸດຢ່າງໝັ້ນຄົງ. ນີ້ແມ່ນຄວາມປາດຖະໜາພຽງຢ່າງດຽວຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ບໍ່ວ່າທຳມະຊາດຂອງມະນຸດຈະຍິ່ງໃຫຍ່, ທາດແທ້ຂອງມະນຸດຈະຕໍ່າຕ້ອຍ ຫຼື

ຄວາມປະພຶດຂອງມະນຸດໃນອະດີດຈະເປັນແນວໃດກໍຕາມ, ພຣະເຈົ້າກໍບໍ່ສົນໃຈສິ່ງເຫຼົ່ານີ້. ພຣະອົງຫວັງພຽງແຕ່ວ່າ ມະນຸດຈະເລີ່ມສ້າງພາບລັກຂອງພຣະເຈົ້າທີ່ພວກເຂົາມີໃນໃຈຂອງພວກເຂົາຂຶ້ນມາໃໝ່ຢ່າງສົມບູນ ແລະ ມາຮູ້ຈັກທາດແທ້ຂອງມະນຸດຊາດ ເຊິ່ງດ້ວຍເຫດນັ້ນ ຈຶ່ງຈະມີການປ່ຽນແປງທັດສະນະຄະຕິທາງການນຶກຄິດຂອງມະນຸດ ແລະ ເພື່ອທີ່ຈະສາມາດປາດຖະໜາຫາພຣະເຈົ້າຈາກສ່ວນເລິກ ແລະ ປຸກຄວາມຕິດພັນກັບພຣະອົງຕະຫຼອດໄປ. ນີ້ແມ່ນສິ່ງດຽວທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ.

ຄວາມຮູ້ເປັນເວລາຫຼາຍພັນປີກ່ຽວກັບວັດທະນະທຳບູຮານ ແລະ ປະຫວັດສາດ ແມ່ນໄດ້ປິດຄວາມຄິດ, ແນວຄວາມຄິດ ແລະ ທັດສະນະຄະຕິທາງດ້ານຈິດໃຈຂອງມະນຸດຢ່າງແໜ້ນໜາ ເຊິ່ງເຮັດໃຫ້ພວກເຂົາໜຽວແໜ້ນ ແລະ ເປັນສານທີ່ບໍ່ສາມາດເສື່ອມສະຫຼາຍ[1]. ມະນຸດດຳລົງຊີວິດຢູ່ໃນວົງຈອນສິບແປດຂອງນະຣົກ ຄືກັບວ່າ ພວກເຂົາຖືກພຣະເຈົ້າຂັບໄລ່ໃຫ້ໄປຢູ່ຄຸກໃຕ້ດິນ ໂດຍບໍ່ໃຫ້ເຫັນແສງສະຫວ່າງອີກເລີຍ. ຄວາມຄິດແບບສັກດິນາໄດ້ກົດຂີ່ຜູ້ຄົນຈົນພວກເຂົາເກືອບບໍ່ສາມາດຫາຍໃຈ ແລະ ຫາຍໃຈບໍ່ໄດ້. ພວກເຂົາບໍ່ມີເຫື່ອແຮງແມ່ນແຕ່ໜ້ອຍດຽວທີ່ຈະຕໍ່ຕ້ານ; ພວກເຂົາໄດ້ແຕ່ອົດທົນ ແລະ ອົດກັ້ນຢ່າງງຽບໆ... ບໍ່ເຄີຍມີຜູ້ໃດກ້າທີ່ຈະຕໍ່ສູ້ ຫຼື ລຸກຂຶ້ນສູ້ເພື່ອຄວາມຊອບທຳ ແລະ ຄວາມຍຸຕິທຳ; ແຕ່ລະມື້ ແລະ ແຕ່ລະປີຜູ້ຄົນດຳລົງຊີວິດຢູ່ຮ້າຍກວ່າສັດ ພາຍໃຕ້ການທຳຮ້າຍ ແລະ ການຂົ່ມເຫັງຂອງຫຼັກການສັກດິນາ. ພວກເຂົາບໍ່ເຄີຍຄິດທີ່ຈະສະແຫວງຫາພຣະເຈົ້າ ເພື່ອມີຄວາມສຸກຢູ່ໃນໂລກມະນຸດ. ມັນຄືກັບວ່າ ຜູ້ຄົນຖືກຕີລົງຈົນເຖິງຈຸດທີ່ວ່າພວກເຂົາຄືກັບໃບໄມ້ຫຼົ່ນໃນລະດູໃບໄມ້ຫຼົ່ນ, ແຫ່ວແຫ້ງ, ຫ່ຽວ ແລະ ເຫຼືອງ-ສີນໍ້າຕານ. ຜູ້ຄົນໄດ້ສູນເສຍຄວາມຊົງຈຳຂອງພວກເຂົາແຕ່ດົນນານ; ພວກເຂົາດຳລົງຊີວິດໃນນະຣົກ ຢ່າງສິ້ນຫວັງທີ່ເອີ້ນວ່າ ໂລກມະນຸດ, ລໍຖ້າການມາເຖິງຂອງຍຸກສຸດທ້າຍ ເພື່ອວ່າ ພວກເຂົາອາດຈະດັບສູນໄປພ້ອມກັນກັບນະຣົກນີ້ ຄືກັບວ່າຍຸກສຸດທ້າຍທີ່ພວກເຂົາປາດຖະໜາແມ່ນມື້ທີ່ມະນຸດຈະໄດ້ຮັບຄວາມສະຫງົບຢ່າງມີຄວາມສຸກ. ຫຼັກການຂອງສັກດິນາ ແມ່ນໄດ້ນຳເອົາຊີວິດມະນຸດໄປສູ່ "ແດນມໍລະນາ" ເຮັດໃຫ້ກຳລັງຕໍ່ຕ້ານຂອງມະນຸດອ່ອນແອລົງ. ການກົດຂີ່ທຸກຮູບແບບໄດ້ຍູ້ມະນຸດຕົກລົງສູ່ແດນມໍລະນາເລິກຍິ່ງຂຶ້ນເລື້ອຍໆ ແລະ ຫ່າງໄກອອກຈາກພຣະເຈົ້າເທື່ອລະກ້າວ. ຈົນເຖິງປັດຈຸບັນນີ້ ເຂົາໄດ້ກາຍເປັນຄົນແປກໜ້າຕໍ່ພຣະເຈົ້າຢ່າງສິ້ນເຊີງ ແລະ ຟ້າວລົບຫຼີກພຣະອົງເວລາພວກເຂົາພົບກັນ. ມະນຸດບໍ່ສົນໃຈພຣະອົງ ແລະ ປ່ອຍໃຫ້ພຣະອົງຢືນຢູ່ຂ້າງໜຶ່ງຜູ້ດຽວ ຄືກັບວ່າ ມະນຸດບໍ່ເຄີຍຮູ້ຈັກພຣະອົງ ແລະ ບໍ່ເຄີຍພົບເຫັນພຣະອົງມາກ່ອນ. ເຖິງຢ່າງໃດກໍຕາມ ພຣະເຈົ້າໄດ້ລໍຖ້າມະນຸດຜ່ານການເດີນທາງອັນຍາວໄກຂອງຊີວິດມະນຸດ, ບໍ່ເຄີຍໂຍນຄວາມໂມໂຫທີ່ບໍ່ສາມາດຄວບຄຸມໄດ້ຂອງພຣະອົງໃສ່ມະນຸດ. ພຣະອົງພຽງແຕ່ລໍຖ້າຢ່າງງຽບໆ ເພື່ອໃຫ້ມະນຸດສຳນຶກຜິດ ແລະ ເລີ່ມຕົ້ນໃໝ່. ແຕ່ດົນນານມາແລ້ວ ພຣະເຈົ້າໄດ້

1 "ເປັນສານທີ່ບໍ່ສາມາດເສື່ອມສະຫຼາຍ" ແມ່ນມີເຈດຕະນາເຍາະເຍີ້ຍ ເຊິ່ງໝາຍຄວາມວ່າ ຜູ້ຄົນມີຄວາມເຂັ້ມງວດໃນດ້ານຄວາມຮູ້, ວັດທະນະທຳ ແລະ ທັດສະນະຄະຕິທາງດ້ານຈິດວິນຍານຂອງພວກເຂົາ.

ສະເດັດລົງມາໂລກມະນຸດເພື່ອແບ່ງປັນຄວາມທຸກຂອງໂລກມະນຸດກັບມະນຸດ. ພຣະອົງໄດ້ອາໄສຢູ່ກັບມະນຸດເປັນເວລາຫຼາຍປີ ແຕ່ບໍ່ມີໃຜໄດ້ຄົ້ນພົບການມີຢູ່ຂອງພຣະອົງ. ພຣະເຈົ້າໄດ້ແຕ່ອົດທົນຢູ່ຢ່າງງຽບໆຕໍ່ຄວາມທຸກທໍລະມານຂອງຄວາມສົກກະປົກໃນໂລກມະນຸດ ໃນຂະນະທີ່ດຳເນີນພາລະກິດທີ່ພຣະອົງໄດ້ນຳມາສູ່ຜູ້ຄົນ. ພຣະອົງສືບຕໍ່ອົດກັ້ນເພື່ອຄວາມປະສົງຂອງພຣະເຈົ້າພຣະບິດາ ແລະ ເພື່ອຄວາມຕ້ອງການຂອງມະນຸດຊາດ, ພຣະອົງປະສົບກັບຄວາມທຸກທີ່ມະນຸດບໍ່ເຄີຍປະສົບມາກ່ອນ. ຢູ່ຕໍ່ໜ້າມະນຸດ ພຣະອົງໄດ້ລໍຖ້າເຂົາຢ່າງງຽບໆ ແລະ ຢູ່ຕໍ່ໜ້າມະນຸດ ພຣະອົງໄດ້ຖ່ອມຕົວພຣະອົງເອງ ເພື່ອຄວາມປະສົງຂອງພຣະເຈົ້າພຣະບິດາ ແລະ ພ້ອມນັ້ນກໍເພື່ອຄວາມຕ້ອງການຂອງມະນຸດຊາດອີກດ້ວຍ. ຄວາມຮູ້ກ່ຽວກັບວັດທະນະທຳບູຮານໄດ້ລັກເອົາມະນຸດຢ່າງລັບໆຈາກການສະຖິດຂອງພຣະເຈົ້າ ແລະ ມອບເຂົາໃຫ້ແກ່ກະສັດຂອງພວກຜີຮ້າຍ ແລະ ລູກຫຼານຂອງມັນ. ໜັງສືທັງ 4 ແລະ ວັນນະຄະດີຊັ້ນຍອດທັງ 5[ກ] ໄດ້ເອົາຄວາມຄິດ ແລະ ແນວຄວາມຄິດຂອງມະນຸດເຂົ້າສູ່ອີກຍຸກແຫ່ງການກະບົດ ເຮັດໃຫ້ມະນຸດເຊີດຊູຜູ້ທີ່ຂຽນໜັງສື ແລະ ວັນນະຄະດີຊັ້ນຍອດຂອງສາລະບັນເພີ່ມຍິ່ງຂຶ້ນ ແລະ ຜົນຕາມມາກໍຄື ເຮັດໃຫ້ແນວຄວາມຄິດຂອງເຂົາກ່ຽວກັບພຣະເຈົ້າຮ້າຍແຮງຂຶ້ນກວ່າເກົ່າ. ກະສັດຂອງພວກຜີຮ້າຍໄດ້ໂຍນພຣະເຈົ້າອອກຈາກຫົວໃຈຂອງມະນຸດຢ່າງໄຮ້ຄວາມປານີ ໂດຍທີ່ພວກເຂົາບໍ່ຮູ້ຕົວ ແລະ ຫຼັງຈາກນັ້ນ ມັນເອງກໍມາຢູ່ໃນຫົວໃຈຂອງມະນຸດດ້ວຍຄວາມດີອົກດີໃຈຢ່າງມີໄຊຊະນະ. ນັບແຕ່ເວລານັ້ນມາ ມະນຸດແມ່ນຖືກຄອບງຳໂດຍວິນຍານທີ່ຂີ້ເຮ່ ແລະ ຊົ່ວຮ້າຍ ແລະ ດ້ວຍໃບໜ້າຂອງກະສັດຂອງພວກຜີຮ້າຍ. ຄວາມກຽດຊັງພຣະເຈົ້າເຕັມຢູ່ໃນເອິກຂອງເຂົາ ແລະ ຄວາມປອງຮ້າຍຢ່າງຊົ່ວຊ້າຂອງກະສັດຂອງພວກຜີຮ້າຍກໍແຜ່ລາມພາຍໃນມະນຸດແຕ່ລະມື້ ຈົນເຂົາຖືກກືນກິນຢ່າງສົມບູນ. ມະນຸດບໍ່ມີອິດສະຫຼະອີກຕໍ່ໄປ ແລະ ບໍ່ມີທາງຫຼຸດພົ້ນອອກຈາກການພົວພັນຢ່າງແໜ້ນຂອງກະສັດຂອງພວກຜີຮ້າຍໄດ້. ມະນຸດບໍ່ມີທາງເລືອກນອກຈາກຖືກຈັບກຸມຢູ່ກັບບ່ອນ, ຍອມຈຳນົນຕໍ່ມັນ ແລະ ລົ້ມລົງຍອມອ່ອນນ້ອມຢູ່ຕໍ່ໜ້າມັນ. ດົນນານມາແລ້ວ ເມື່ອຫົວໃຈ ແລະ ຈິດວິນຍານຂອງມະນຸດຍັງຢູ່ໃນໄວເດັກ, ກະສັດຂອງພວກຜີຮ້າຍໄດ້ປູກເມັດພືດຂອງກ້ອນເນື້ອແຫ່ງລັດທິເທວະນິຍົມໃສ່ໃນຫົວໃຈ ແລະ ຈິດວິນຍານຂອງເຂົາ, ສອນຄວາມຄິດຜິດໆໃຫ້ກັບເຂົາເຊັ່ນ: "ການສຶກສາວິທະຍາສາດ ແລະ ເຕັກໂນໂລຊີ; ຮັບຮູ້ນະໂຍບາຍ 4 ທັນສະໄໝ; ແລະ ໃນໂລກນີ້ບໍ່ມີພຣະເຈົ້າ". ບໍ່ພຽງແຕ່ເທົ່ານັ້ນ ມັນຍັງປະກາດຊ້ຳແລ້ວຊ້ຳອີກວ່າ: "ໃຫ້ພວກເຮົາອາໄສແຮງງານອັນດຸໝັ່ນຂອງພວກເຮົາເພື່ອສ້າງບ້ານເກີດເມືອງນອນທີ່ສວຍງາມ" ໂດຍຮ້ອງຂໍໃຫ້ທຸກຄົນກຽມພ້ອມແຕ່ໄວເດັກ ເພື່ອຮັບໃຊ້ປະເທດຊາດຂອງພວກເຂົາຢ່າງຊື່ສັດ. ມະນຸດຖືກນຳມາຢູ່ຕໍ່ໜ້າມັນໂດຍທີ່ບໍ່ຮູ້ຕົວ ເຊິ່ງມັນແອບອ້າງສິດເອົາຄວາມດີຄວາມຊອບໃຫ້ກັບຕົວເອງໂດຍບໍ່ລັງເລໃຈ (ໝາຍເຖິງຄວາມດີຄວາມຊອບຂອງພຣະເຈົ້າສຳລັບການຖືມະນຸດຊາດທັງໝົດຢູ່ໃນມືຂອງພຣະອົງ). ມັນບໍ່ເຄີຍມີຄວາມຮູ້ສຶກລະອາຍໃຈ. ຍິ່ງໄປກວ່ານັ້ນ, ມັນຍັງໄດ້ຈັບກຸມເອົາຄົນຂອງພຣະເຈົ້າ ແລະ ລາກພວກເຂົາກັບໄປເຮືອນຂອງມັນ ໂດຍບໍ່ລະອາຍໃຈ,

---

ກ ໜັງສືທັງ 4 ແລະ ວັນນະຄະດີຊັ້ນຍອດທັງ 5 ແມ່ນໜັງສືແຫ່ງລັດທິຂົງຈື້ໃນປະເທດຈີນ.

ກົງກັນຂ້າມມັນໂດດຂຶ້ນໂຕະຄືກັບໂຕໝູ ແລະ ໃຫ້ມະນຸດບູຊາມັນຄືກັບພຣະເຈົ້າ. ຈັ່ງແມ່ນມັນຊ່າງສິ້ນຄິດແທ້ໆ! ມັນຮ້ອງຢ່າງອັບປະຍົດທີ່ໜ້າຕົກໃຈອອກມາວ່າ: "ບໍ່ມີພຣະເຈົ້າໃນໂລກ. ລົມມາຈາກການວິວັດທະນາການອີງຕາມກົດເກນທາງທຳມະຊາດ; ຝົນຕົກເມື່ອມີອາຍນໍ້າທີ່ປະທະກັບຄວາມເຢັນແລ້ວກັ່ນເປັນລະອອງນໍ້າທີ່ຕົກລົງສູ່ແຜ່ນດິນໂລກ; ແຜ່ນດິນໄຫວແມ່ນການສັ່ນສະເທືອນຂອງພື້ນແຜ່ນດິນໂລກຍ້ອນການປ່ຽນແປງທາງພູມສາດ; ຄວາມແຫ້ງແລ້ງແມ່ນມາຈາກຄວາມແຫ້ງໃນອາກາດທີ່ເກີດຈາກການແຕກຂອງພະລັງປະລະມະນູໃນໜ້າພື້ນຂອງດວງຕາເວັນ. ນີ້ແມ່ນປະກົດການທາງທຳມະຊາດ. ແລ້ວໃນທຸກສິ່ງນີ້ ມີສ່ວນໃດທີ່ເປັນການກະທຳຂອງພຣະເຈົ້າບໍ?" ມີຜູ້ຄົນເຖິງກັບຮ້ອງອອກເປັນຄຳຖະແຫຼງການຄືກັບຄຳຖະແຫຼງການດັ່ງຕໍ່ໄປນີ້ທີ່ບໍ່ຄວນຮ້ອງອອກມາ ວ່າ: "ໃນບູຮານຕະການມາ ມະນຸດແມ່ນວິວັດທະນາການມາຈາກທະນີ ແລະ ໂລກໃນປັດຈຸບັນແມ່ນສືບທອດມາຈາກສັງຄົມບູຮານປະມານພັນລ້ານປີຜ່ານມາ. ປະເທດຊາດຈະຮຸ່ງເຮືອງ ຫຼື ລົ້ມຈົມ ທັງໝົດແມ່ນອາໄສມືຂອງປະຊາຊົນ". ໃນເບື້ອງຫຼັງແລ້ວ ມັນເຮັດໃຫ້ມະນຸດຫ້ອຍມັນໄວ້ຢູ່ເທິງຝາ ແລະ ວາງມັນໄວ້ເທິງໂຕະເພື່ອບູຊາ ແລະ ຖວາຍເຄື່ອງບູຊາໃຫ້ກັບມັນ. ໃນຂະນະດຽວກັນມັນກໍຮ້ອງວ່າ: "ບໍ່ມີພຣະເຈົ້າ", ມັນແຕ່ງຕັ້ງມັນເອງເປັນພຣະເຈົ້າ ໂດຍຍູ້ພຣະເຈົ້າອອກຈາກຂອບເຂດຂອງແຜ່ນດິນໂລກຢ່າງຮຸນແຮງໃນຂະນະທີ່ຢືນຢູ່ບ່ອນຂອງພຣະເຈົ້າ ແລະ ຮັບໜ້າທີ່ເປັນກະສັດຂອງພວກຜີຮ້າຍ. ຈັ່ງແມ່ນໄຮ້ເຫດຜົນແທ້ໆ! ມັນເຮັດໃຫ້ຄົນກຽດຊັງມັນຈົນເຂົ້າກະດູກດຳ. ເບິ່ງຄືກັບວ່າ ພຣະເຈົ້າ ແລະ ມັນຄືຄູ່ສັດຕູສາບານກັນ ແລະ ທັງສອງບໍ່ສາມາດຢູ່ຮ່ວມກັນໄດ້. ມັນວາງອຸບາຍຂັບໄລ່ພຣະເຈົ້າໜີ ໃນຂະນະທີ່ມັນໄປມາຢ່າງເປັນອິດສະຫຼະ ແລະ ຢູ່ເໜືອກົດໝາຍ[2]. ຈັ່ງແມ່ນມັນເປັນກະສັດຂອງພວກຜີຮ້າຍແທ້ໆ! ຈະສາມາດອົດທົນຕໍ່ການມີຢູ່ຂອງມັນໄດ້ແນວໃດ? ມັນຈະບໍ່ເຊົາຈົນກວ່າມັນໄດ້ເຮັດໃຫ້ພາລະກິດຂອງພຣະເຈົ້າພິນາດລົງ ແລະ ປ່ອຍໃຫ້ພາລະກິດທັງໝົດນັ້ນຢູ່ໃນຄວາມສັບສົນວຸ້ນວາຍຢ່າງສິ້ນເຊີງ[3] ຄືກັບວ່າ ມັນຕ້ອງການຕໍ່ຕ້ານພຣະເຈົ້າຈົນເຖິງທີ່ສຸດ ຈົນກວ່າວ່າ ປາຈະຕາຍ ຫຼື ແຫຈະຂາດ, ຕັ້ງຕົນເປັນປໍລະປັກຕໍ່ພຣະເຈົ້າຢ່າງຕັ້ງໃຈ ແລະ ຫຍັບເຂົ້າໃກ້ພຣະອົງຫຼາຍຂຶ້ນ. ໃບໜ້າທີ່ເປັນຕາຊັງຂອງມັນແມ່ນຖືກຖອດໜ້າກາກອອກຢ່າງສິ້ນເຊີງແຕ່ດົນນານແລ້ວ, ຕອນນີ້ ມັນມີຮອຍຊໍ້າ ແລະ ຖືກຕີ[4] ແລະໃນສະພາບທີ່ໂສກເສົ້າເສຍໃຈ ມັນກໍຍັງບໍ່ລົດລະຄວາມກຽດຊັງຂອງມັນຕໍ່ພຣະເຈົ້າ ຄືກັບວ່າ ໂດຍກືນກິນພຣະເຈົ້າພຽງໃນຄຳດຽວ ມັນກໍຈະສາມາດບັນເທົາຄວາມກຽດຊັງທີ່ຂັງຢູ່ໃນໃຈຂອງມັນໄດ້ແລ້ວ. ພວກເຮົາຈະສາມາດອົດທົນກັບມັນຜູ້ເປັນສັດຕູທີ່ເປັນຕາຊັງຂອງພຣະເຈົ້ານີ້ໄດ້ແນວໃດ! ມີແຕ່ການກຳຈັດ ແລະ ການທຳລາຍລ້າງມັນຢ່າງສິ້ນເຊີງເທົ່ານັ້ນທີ່ຈະເຮັດໃຫ້ຄວາມປາດຖະໜາຂອງຊີວິດພວກເຮົາເກີດໝາກຜົນ. ມັນໄດ້ຮັບອະນຸຍາດໃຫ້ແລ່ນອາລະວາດໄດ້ແນວໃດ? ມັນໄດ້ເຮັດໃຫ້ມະນຸດ

2 "ໄປມາຢ່າງເປັນອິດສະຫຼະ ແລະ ຢູ່ເໜືອກົດໝາຍ" ບົ່ງບອກວ່າ ຜີຮ້າຍແມ່ນເປັນບ້າ ແລະ ແລ່ນອາລະວາດ.

3 "ຄວາມສັບສົນວຸ້ນວາຍຢ່າງສິ້ນເຊີງ" ໝາຍເຖິງການປະພຶດຢ່າງໂຫດຮ້າຍຂອງຜີຮ້າຍແມ່ນສິ່ງທີ່ທົນບໍ່ໄດ້.

4 "ຮອຍຊໍ້າ ແລະ ຖືກຕີ" ໝາຍເຖິງໃບໜ້າທີ່ຂີ້ຮ້າຍຂອງກະສັດຂອງພວກຜີຮ້າຍ.

ເສື່ອຊາມຈົນເຖິງລະດັບທີ່ວ່າ ມະນຸດບໍ່ຮູ້ຈັກຕາເວັນແຫ່ງສະຫວັນ ແລະ ໄດ້ກາຍເປັນຄົນຕາຍດ້ານ ແລະ ຂາດຄວາມຮູ້ສຶກ. ມະນຸດໄດ້ສູນເສຍເຫດຜົນຂອງມະນຸດປົກກະຕິ. ເປັນຫຍັງຈຶ່ງບໍ່ເສຍສະຫຼະຊີວິດທັງໝົດຂອງພວກເຮົາເພື່ອທຳລາຍ ແລະ ຈູດເຜົາມັນ ເພື່ອກຳຈັດຄວາມກັງວົນໃນອະນາຄົດ ແລະ ເຮັດໃຫ້ພາລະກິດຂອງພຣະເຈົ້າໄປເຖິງຈຸດແຫ່ງຄວາມງົດງາມທີ່ບໍ່ເຄີຍເກີດຂຶ້ນມາກ່ອນໄວຂຶ້ນ? ກຸ່ມຄົນຊົ່ວດັ່ງກ່າວນີ້ໄດ້ມາຢູ່ທ່າມກາງໂລກມະນຸດ ແລະ ເຮັດໃຫ້ມີຄວາມວຸ້ນວາຍ. ພວກເຂົາໄດ້ນຳເອົາມະນຸດທຸກຄົນໄປໄວ້ຢູ່ເທິງໜ້າຜາ ແລະ ວາງກົນອຸບາຍຢ່າງລັບໆ ເພື່ອຍູ້ພວກເຂົາລົງໃຫ້ແຕກຫັກເປັນເສດສ່ວນ ແລະ ກິນຊາກສົບຂອງພວກເຂົາ. ພວກເຂົາຫວັງຢ່າງໄຮ້ປະໂຫຍດທີ່ຈະມ້າງເພແຜນການຂອງພຣະເຈົ້າ ແລະ ຕໍ່ສູ້ກັບພຣະອົງ ໂດຍເດີມພັນທຸກສິ່ງດ້ວຍການໂຍນໝາກຄະລອກເທື່ອດຽວ[5]. ສິ່ງນີ້ບໍ່ໄດ້ງ່າຍເລີຍ! ຄວາມຈິງແລ້ວ, ໄມ້ກາງແຂນໄດ້ກຽມໄວ້ແລ້ວສຳລັບກະສັດຂອງພວກຜີຮ້າຍທີ່ມີຄວາມຜິດອາຊະຍາກຳທີ່ຮ້າຍແຮງທີ່ສຸດ. ພຣະເຈົ້າບໍ່ໄດ້ຢູ່ກັບໄມ້ກາງແຂນ, ພຣະອົງໄດ້ໂຍນຖິ້ມມັນໄວ້ທາງຂ້າງເພື່ອຜີຮ້າຍແລ້ວ. ພຣະເຈົ້າໄດ້ຮັບໄຊຊະນະແຕ່ດົນມາແລ້ວ ແລະ ບໍ່ໄດ້ຮູ້ສຶກໂສກເສົ້າກັບຄວາມບາບຂອງມະນຸດຊາດອີກຕໍ່ໄປ, ແຕ່ພຣະອົງຈະນຳເອົາຄວາມລອດພົ້ນມາສູ່ມະນຸດຊາດທັງໝົດ.

ຈາກເບື້ອງເທິງຫາເບື້ອງລຸ່ມ ແລະ ຈາກຕອນເລີ່ມຕົ້ນຫາຕອບຈົບ, ຊາຕານໄດ້ລົບກວນພາລະກິດຂອງພຣະເຈົ້າ ແລະ ປະພຶດໃນທາງກົງກັນຂ້າມກັບພຣະອົງ. ການເວົ້າກ່ຽວກັບ “ມໍລະດົກທາງວັດທະນະທຳບູຮານ”, ການໃຫ້ຄຸນຄ່າ “ຄວາມຮູ້ກ່ຽວກັບວັດທະນາທຳບູຮານ”, “ການສັ່ງສອນຂອງລັດທິເຕົ໋າ ແລະ ຂົງຈື້” ແລະ “ວັນນະຄະດີຊັ້ນຍອດຂອງຂົງຈື້ ແລະ ພິທີການຂອງສັກດີນາ” ທຸກສິ່ງນີ້ໄດ້ນຳພາມະນຸດໄປສູ່ນະຮົກ. ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝໃນປັດຈຸບັນ ພ້ອມກັບອຸດສາຫະກຳ, ກະສິກຳ ແລະ ທຸລະກິດທີ່ມີການພັດທະນາຢ່າງສູງ ແມ່ນບໍ່ມີໃຫ້ເຫັນຢູ່ຈັກບ່ອນເລີຍ. ກົງກັນຂ້າມ, ທຸກສິ່ງທີ່ມັນເຮັດແມ່ນເນັ້ນໃສ່ພິທີການຂອງສັກດີນາທີ່ເຜີຍແຜ່ໂດຍ “ທະນີ” ຂອງສະໄໝບູຮານເພື່ອຈົງໃຈລົບກວນ, ຕໍ່ຕ້ານ ແລະ ທຳລາຍພາລະກິດຂອງພຣະເຈົ້າ. ມັນບໍ່ພຽງແຕ່ສືບຕໍ່ເຮັດໃຫ້ມະນຸດເຈັບປວດຈົນຮອດປັດຈຸບັນ ແຕ່ມັນຍັງຕ້ອງການກືນກິນ[6] ມະນຸດທັງໝົດ. ການເຜີຍແຜ່ຄຳສອນດ້ານສິນບັດສິນທຳ ແລະ ຈັນຍາບັນຂອງສັກດີນາ ແລະ ການຖ່າຍທອດຄວາມຮູ້ກ່ຽວກັບວັດທະນະທຳບູຮານໄດ້ສິ່ງຜົນກະທົບຕໍ່ມະນຸດແຕ່ດົນນານມາແລ້ວ ແລະ ໄດ້ຫັນປ່ຽນມະນຸດໄປເປັນມານຮ້າຍທັງໃຫຍ່ ແລະ ນ້ອຍ. ມີຄົນຈຳນວນໜ້ອຍທີ່ຈະຍິນດີຕ້ອນຮັບພຣະເຈົ້າ ແລະ ຕ້ອນຮັບການສະເດັດມາຂອງພຣະເຈົ້າຢ່າງດີອົກດີໃຈ. ໃບໜ້າຂອງມະນຸດທຸກຄົນແມ່ນເຕັມໄປດ້ວຍເຈດຕະນາ

---

5 “ເດີມພັນທຸກສິ່ງດ້ວຍການໂຍນໝາກຄະລອກເທື່ອດຽວ” ໝາຍເຖິງການທຸ້ມເງິນທັງໝົດຂອງບຸກຄົນໃສ່ການພະນັນບາດດຽວເພື່ອຫວັງຈະເອົາຊະນະໃນທີ່ສຸດ. ນີ້ແມ່ນຄຳອຸປະມາສຳລັບແຜນອຸບາຍທີ່ຮ້າຍກາດ ແລະ ຊົ່ວຊ້າຂອງຜີຮ້າຍ. ສຳນວນນີ້ແມ່ນໃຊ້ເພື່ອເປັນການເຍາະເຍີ້ຍ.

6 “ກືນກິນ” ໝາຍເຖິງພຶດຕິກຳທີ່ໂຫດຮ້າຍຂອງກະສັດຂອງພວກຜີຮ້າຍທີ່ປຸ້ນເອົາຜູ້ຄົນທັງໝົດ.

ຄາດຕະກຳ ແລະ ຢູ່ທຸກບ່ອນກໍມີແຕ່ລົມຫາຍໃຈແຫ່ງການເຂັ່ນຂ້າກະຈາຍໄປທົ່ວອາກາດ. ພວກເຂົາຕ້ອງການຢາກຂັບໄລ່ພຣະເຈົ້າອອກຈາກດິນແດນແຫ່ງນີ້; ພວກເຂົາຈັດແຈງໂຕເອງໃນຖັນແຖວຂອງການຕໍ່ສູ້ເພື່ອ "ທຳລາຍລ້າງ" ພຣະເຈົ້າດ້ວຍມີດ ແລະ ງ້າວທີ່ຢູ່ໃນມື. ໃນທົ່ວດິນແດນແຫ່ງຜີຮ້າຍນີ້, ມະນຸດຖືກສອນຢູ່ຕະຫຼອດວ່າ ບໍ່ມີພຣະເຈົ້າ, ມີແຕ່ພະທຽມແຜ່ລາມໄປທົ່ວ ແລະ ໃນອາກາດກໍກະຈາຍໄປດ້ວຍກິ່ນອາຍແຫ່ງຄວາມວິນວຽນປວດຮາກຈາກການຈູດເຈ້ຍ ແລະ ທູບ ເຊິ່ງຄວັນກຸ້ມຈົນຫາຍໃຈບໍ່ອອກ. ມັນຄືກັບວ່າ ເປັນກິ່ນເໝັນຂອງຂີ້ຕົມທີ່ປົກຫຸ້ມດ້ວຍການບິດມ້ວນໂຕຂອງງູພິດໃຫຍ່, ເປັນກິ່ນທີ່ເໝັນຫຼາຍຈົນຜູ້ຄົນບໍ່ສາມາດເຊົາຮາກໄດ້. ນອກຈາກນີ້ແລ້ວ, ຍັງສາມາດໄດ້ຍິນສຽງຄ່ອຍໆຂອງພວກຜີສາດທີ່ຊົ່ວຮ້າຍສວດຄໍາພີ ເຊິ່ງຄືກັບວ່າ ເປັນສຽງດັງມາແຕ່ໄກໆໃນນະຮົກ, ເປັນສຽງດັງຫຼາຍຈົນຜູ້ຄົນບໍ່ສາມາດເຊົາສັ່ນເຊັນໄດ້. ທົ່ວດິນແດນແຫ່ງນີ້ ມີຮູບປັ້ນບູຊາທຸກສີຂອງສາຍຮຸ້ງກະຈາຍໄປທົ່ວ ເຊິ່ງຜັນປ່ຽນດິນແດນນີ້ໄປເປັນໂລກແຫ່ງຄວາມເບີກບານ ໃນຂະນະທີ່ກະສັດຂອງພວກຜີຮ້າຍຫົວເຍາະເຍີ້ຍຢູ່ຢ່າງຊົ່ວຊ້າ ຄືກັບວ່າ ແຜນການທີ່ຊົ່ວຮ້າຍຂອງມັນໄດ້ປະສົບຜົນສຳເລັດແລ້ວ. ໃນຂະນະດຽວກັນນັ້ນ, ມະນຸດແມ່ນຍັງບໍ່ຮູ້ຫຍັງເລີຍ ແລະ ເຂົາບໍ່ຮູ້ເລີຍວ່າ ຜີຮ້າຍໄດ້ເຮັດໃຫ້ເຂົາເສື່ອມຊາມຈົນເຖິງລະດັບທີ່ວ່າ ເຂົາໄດ້ກາຍເປັນຄົນໄຮ້ສະຕິ ແລະ ໄດ້ແຕ່ເຮັດເປັນຄໍຕົກຍອມຮັບໃນຄວາມພ່າຍແພ້. ມັນປາດຖະໜາທີ່ຈະກວາດລ້າງທຸກສິ່ງທີ່ເປັນຂອງພຣະເຈົ້າດ້ວຍການໂຈມຕີຄັ້ງດຽວ ແລະ ເພື່ອເສື່ມຊາມພຣະອົງ ແລະ ສັງຫານພຣະອົງອີກຄັ້ງ; ມັນຕັ້ງໃຈທຳລາຍ ແລະ ລົບກວນພາລະກິດຂອງພຣະອົງ. ມັນສາມາດເຮັດໃຫ້ພຣະເຈົ້າມີສະຖານະທຽບເທົ່າກັບມັນໄດ້ແນວໃດ? ມັນສາມາດທົນຕໍ່ການທີ່ພຣະເຈົ້າ "ແຊກແຊງ" ວຽກງານຂອງມັນໃນທ່າມກາງມະນຸດໄດ້ແນວໃດ? ມັນສາມາດຍອມໃຫ້ພຣະເຈົ້າເປີດໜ້າກາກອອກຈາກໃບໜ້າອັນເປັນຕາຊັງຂອງມັນໄດ້ແນວໃດ? ມັນສາມາດຍອມໃຫ້ພຣະເຈົ້າເຮັດໃຫ້ວຽກງານຂອງມັນແຕກກະຈາຍໄດ້ແນວໃດ? ຜີຮ້າຍນີ້ທີ່ເຕັມໄປດ້ວຍຄວາມໂມໂຫຢ່າງແຮງ ສາມາດຍອມໃຫ້ພຣະເຈົ້າຄວບຄຸມສະໜາມໜ້າບ້ານຂອງມັນຢູ່ເທິງແຜ່ນດິນໂລກໄດ້ແນວໃດ? ມັນຈະສາມາດເຕັມໃຈຂາບລົງຕໍ່ລິດທານຸພາບອັນສູງສົ່ງຂອງພຣະອົງໄດ້ແນວໃດ? ໃບໜ້າທີ່ເປັນຕາຊັງຂອງມັນຖືກເປີດເຜີຍຕາມສິ່ງທີ່ມັນເປັນ ດັ່ງນັ້ນຜູ້ຄົນຈຶ່ງບໍ່ຮູ້ວ່າຈະຫົວ ຫຼື ຈະໄຫ້ດີ ແລະ ມັນກໍຍາກທີ່ຈະເວົ້າເຖິງສິ່ງນີ້ແທ້ໆ. ນີ້ບໍ່ແມ່ນທາດແທ້ຂອງມັນບໍ? ດ້ວຍຈິດວິນຍານທີ່ຂີ້ຮ້າຍ, ມັນຍັງເຊື່ອວ່າ ມັນງາມຈົນເຫຼືອເຊື່ອ. ກຸ່ມຜູ້ສົມຮູ້ຮ່ວມຄິດໃນອາຊະຍາກຳນີ້[7]! ພວກເຂົາມາຢູ່ໂລກມະນຸດເພື່ອເພີດເພີນກັບຄວາມສຸກ ແລະ ສ້າງຄວາມວຸ້ນວາຍ, ກໍ່ຄວາມວຸ້ນວາຍຢ່າງແຮງຈົນໂລກກາຍເປັນໂລກທີ່ບໍ່ມີຄວາມແນ່ນອນ ແລະ ບໍ່ໝັ້ນຄົງ; ຫົວໃຈຂອງມະນຸດກໍເຕັມໄປດ້ວຍຄວາມຕື່ນຕົກໃຈ ແລະ ຄວາມບໍ່ສະບາຍໃຈ; ພວກເຂົາໄດ້ລໍ້ຫລິ້ນກັບມະນຸດຫຼາຍເກີນໄປຈົນລັກສະນະຂອງເຂົາໄດ້ກາຍເປັນສັດຮ້າຍທີ່ໄຮ້ມະນຸດສະທຳແຫ່ງທົ່ງຫຍ້າທີ່ຂີ້ຮ້າຍທີ່ສຸດ ແລະ ຈາກສິ່ງນັ້ນ ຮ່ອງຮອຍສຸດທ້າຍຂອງມະນຸດຜູ້ທີ່ບໍລິສຸດດັ່ງເດີມກໍໄດ້ສູນເສຍໄປ. ຍິ່ງໄປກວ່ານັ້ນ ພວກເຂົາຍັງ

7 "ຜູ້ສົມຮູ້ຮ່ວມຄິດໃນອາຊະຍາກຳ" ແມ່ນປະເພດດຽວກັນກັບ "ກຸ່ມອັນຕະພານ".

ປາດຖະໜາທີ່ຈະຮັບເອົາອຳນາດອະທິປະໄຕຢູ່ເທິງແຜ່ນດິນໂລກ. ພວກເຂົາຂັດຂວາງພາລະກິດຂອງພຣະເຈົ້າຢ່າງໜັກຈົນວ່າພາລະກິດນັ້ນເກືອບບໍ່ສາມາດເຄື່ອນໄຫວໄປຂ້າງໜ້າໄດ້ ແລະ ພວກເຂົາໄດ້ປິດກັ້ນມະນຸດຢ່າງໜາແໜ້ນດັ່ງກຳແພງທອງແດງ ແລະ ເຫຼັກ. ເມື່ອໄດ້ເຮັດບາບໜາສາຫັດຢ່າງໜັກ ແລະ ສ້າງຄວາມພິນາດຢ່າງຫຼວງຫຼາຍ ແລ້ວພວກເຂົາຍັງຄາດຫວັງທີ່ຈະໄດ້ຮັບສິ່ງອື່ນນອກຈາກການຂ້ຽນຕີຢູ່ບໍ? ພວກຜີສາດ ແລະ ວິນຍານຊົ່ວຮ້າຍໄດ້ແລ່ນອາລະວາດຢູ່ເທິງແຜ່ນດິນໂລກເປັນເວລາດົນນານ ແລະ ໄດ້ປິດກັ້ນຄວາມປະສົງ ແລະ ຄວາມພະຍາຍາມຢ່າງເຈັບປວດຂອງພຣະເຈົ້າຢ່າງປົກໜາຈົນບໍ່ສາມາດເຈາະຜ່ານພວກມັນໄດ້. ຈັ່ງແມ່ນເປັນຄວາມຜິດບາບຂອງມະນຸດແທ້ໆ! ພຣະເຈົ້າຈະບໍ່ຮູ້ສຶກກັງວົນໃຈໄດ້ແນວໃດ? ພຣະເຈົ້າຈະບໍ່ຮູ້ສຶກໂກດຮ້າຍໄດ້ແນວໃດ? ພວກເຂົາໄດ້ຂັດຂວາງ ແລະ ຕໍ່ຕ້ານພາລະກິດຂອງພຣະເຈົ້າຢ່າງຮ້າຍແຮງ: ຊ່າງກະບົດແທ້ໆ! ແມ່ນແຕ່ພວກຜີສາດທັງໃຫຍ່ ແລະ ນ້ອຍຍັງພາກັນປະພຶດຄືໝາຈິ້ງຈອກຢູ່ໃຕ້ຕີນຂອງສິງ ແລະ ຕິດຕາມກະແສຄວາມຊົ່ວຮ້າຍ ສ້າງຄວາມວຸ້ນວາຍຢູ່ທຸກບ່ອນທີ່ພວກເຂົາໄປ. ເຖິງຈະຮູ້ຄວາມຈິງ ແຕ່ພວກເຂົາກໍຈິງໃຈຕໍ່ຕ້ານສິ່ງນັ້ນ, ພວກລູກຊາຍແຫ່ງການກະບົດເອີຍ! ມັນຄືກັບວ່າ ບັດນີ້ກະສັດແຫ່ງນະຣົກຂອງພວກເຂົາໄດ້ຂຶ້ນຄອງບັນລັງຂອງກະສັດແລ້ວ, ພວກເຂົາຈຶ່ງໄດ້ພໍໃຈ ແລະ ພູມໃຈກັບໂຕເອງ, ພາກັນປະຕິບັດຕໍ່ຄົນອື່ນດ້ວຍຄວາມດູໝິ່ນ. ມີຈັກຄົນທ່າມກາງພວກເຂົາທີ່ສະແຫວງຫາຄວາມຈິງ ແລະ ເຮັດຕາມຄວາມຊອບທຳ? ພວກເຂົາທຸກຄົນລ້ວນແລ້ວແຕ່ເປັນສັດຮ້າຍທີ່ບໍ່ມີຫຍັງດີໄປກວ່າໝູ ແລະ ໝາທີ່ຢູ່ໃນແຖວໜ້າຂອງຝູງແມງວັນທີ່ເໝັນເນົ່າ, ແກວ່ງຫົວຂອງພວກມັນຢ່າງພາກພູມໃຈກັບໂຕເອງ ແລະ ສ້າງບັນຫາທຸກປະເພດ[8]. ພວກມັນເຊື່ອວ່າ ກະສັດແຫ່ງນະຣົກຂອງພວກມັນແມ່ນກະສັດທີ່ຍິ່ງໃຫຍ່ທີ່ສຸດ ໂດຍທີ່ບໍ່ຮູ້ວ່າພວກມັນເອງບໍ່ແມ່ນສິ່ງອື່ນໃດນອກຈາກແມງວັນທີ່ເໝັນເນົ່າ. ແຕ່ເຖິງຢ່າງນັ້ນ ພວກມັນກໍຍັງຖືໂອກາດໃຊ້ອຳນາດຂອງໝູ ແລະ ໝາທີ່ພວກຖືວ່າເປັນພໍ່ແມ່ເພື່ອໃສ່ຮ້າຍປ້າຍສີຕໍ່ການມີຢູ່ຂອງພຣະເຈົ້າ. ພວກແມງວັນໂຕນ້ອຍໆຄິດວ່າ ພໍ່ແມ່ຂອງພວກມັນໃຫຍ່ຊ່ຳກັບປາວານສີຟ້າ[9]. ພວກມັນບໍ່ຮູ້ເລີຍວ່າໃນຂະນະທີ່ພວກມັນເອງເປັນໂຕນ້ອຍໆ ແຕ່ພໍ່ແມ່ຂອງພວກມັນຄືໝູ ແລະ ໝາສົກກະປົກທີ່ໃຫຍ່ກວ່າພວກມັນຫຼາຍກວ່າຮ້ອຍລ້ານເທົ່າ? ການບໍ່ຮູ້ເຖິງຄວາມຕໍ່າຕ້ອຍຂອງພວກມັນ, ພວກມັນອາໄສກິ່ນເໝັນຂອງຄວາມເນົ່າເປື່ອຍຈາກພວກໝູ ແລະ ໝາເຫຼົ່ານັ້ນເພື່ອແລ່ນອາລະວາດໄປທົ່ວ ແລະ ມີແນວຄິດຢ່າງສິ້ນຫວັງທີ່ຈະໃຫ້ກຳເນີດລູກຫຼານຮຸ່ນໃໝ່ໃນອະນາຄົດ. ມັນຊ່າງໜ້າອັບອາຍທີ່ສຸດ! ການມີປີກສີຂຽວຕິດຢູ່ບ່າຂອງພວກມັນ (ນີ້ໝາຍເຖິງຄຳກ່າວອ້າງຂອງພວກມັນໃນການເຊື່ອພຣະເຈົ້າ), ພວກມັນທະນົງຕົວ ແລະ ໂອ້ອວດກັບຄວາມສວຍງາມ ແລະ ສະເໜ່ຂອງພວກມັນຢູ່ທຸກບ່ອນ ໃນຂະນະ

8 "ສ້າງບັນຫາທຸກປະເພດ" ໝາຍເຖິງການທີ່ຜູ້ຄົນທີ່ເປັນຜີສາດກໍ່ຄວາມວຸ້ນວາຍ, ກີດຂວາງ ແລະ ຕໍ່ຕ້ານພາລະກິດຂອງພຣະເຈົ້າ.

9 "ປາວານສີຟ້າ" ແມ່ນໃຊ້ເພື່ອເປັນການເຍາະເຍີ້ຍ. ມັນຄືຄຳອຸປະມາທີ່ປຽບທຽບແມງວັນທີ່ເປັນໂຕນ້ອຍໆ ຈົນເຮັດໃຫ້ໝູ ແລະ ໝາປາກົດເບິ່ງຄືກັບວ່າ ໃຫຍ່ຊ່ຳກັບປາວານສຳລັບພວກມັນ.

ທີ່ພວກມັນໂຍນຄວາມບໍ່ບໍລິສຸດທີ່ຢູ່ໃນຮ່າງກາຍຂອງພວກມັນຢ່າງລັບໆໃຫ້ກັບມະນຸດ. ຍິ່ງໄປກວ່ານັ້ນ ພວກມັນຍັງພໍໃຈຫຼາຍກັບໂຕເອງ ຄືກັບວ່າ ພວກມັນສາມາດໃຊ້ປີກສີຮຸ້ງສອງປີກເພື່ອປົກປິດຄວາມບໍ່ບໍລິສຸດຂອງພວກມັນ ແລະ ດ້ວຍວິທີເຫຼົ່ານີ້ ພວກມັນຈຶ່ງນຳເອົາການກົດຂີ່ຂົ່ມເຫັງຂອງພວກມັນມາເປັນພາລະໃນການມີຢູ່ຂອງພຣະເຈົ້າທີ່ແທ້ຈິງ (ນີ້ໝາຍເຖິງສິ່ງທີ່ເກີດຂຶ້ນຢູ່ເບື້ອງຫຼັງໂລກສາສະໜາ). ມະນຸດຈະຮູ້ໄດ້ແນວໃດວ່າ ເຖິງວ່າປີກຂອງແມງວັນອາດຈະງົດງາມ ແລະ ເປັນຕາຫຼົງໄຫຼແຕ່ ແທ້ຈິງແລ້ວ ແມງວັນເອງກໍເປັນພຽງສິ່ງມີຊີວິດໂຕນ້ອຍໆທີ່ມີທ້ອງເຕັມໄປດ້ວຍສິ່ງເປິເປື້ອນ ແລະຮ່າງກາຍປົກຄຸມໄປດ້ວຍເຊື້ອໂລກ? ໂດຍອາໄສກຳລັງຂອງໝູ ແລະ ໝາທີ່ພວກມັນຖືວ່າເປັນພໍ່ແມ່ຂອງພວກມັນ, ພວກມັນແລ່ນອາລະວາດທົ່ວດິນແດນ (ນີ້ໝາຍເຖິງວິທີທີ່ເຈົ້າໜ້າທີ່ທາງສາດສະໜາຜູ້ທີ່ຂົ່ມເຫັງພຣະເຈົ້າອາໄສການສະໜັບສະໜູນຢ່າງເຂັ້ມແຂງຈາກລັດຖະບານຂອງປະເທດເພື່ອກະບົດຕໍ່ພຣະເຈົ້າທີ່ແທ້ຈິງ ແລະ ຕໍ່ຄວາມຈິງ) ຢ່າງເປັນອິດສະຫຼະໃນຄວາມໂຫດຮ້າຍຂອງພວກມັນ. ມັນຄືກັບວ່າ ຜີຂອງພວກຟາຣີຊາຍທີ່ເປັນຊາວຢິວໄດ້ກັບຄືນມາປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ພ້ອມກັບພຣະເຈົ້າ, ໄດ້ກັບສູ່ຮັງເກົ່າຂອງພວກເຂົາ. ພວກເຂົາໄດ້ເລີ່ມພາລະກິດແຫ່ງການກົດຂີ່ຂົ່ມເຫັງຂອງພວກເຂົາອີກຄັ້ງ ໂດຍສືບຕໍ່ພາລະກິດຂອງພວກເຂົາທີ່ໄດ້ປະຕິບັດມາເປັນເວລາຫຼາຍພັນປີ. ໃນທີ່ສຸດກຸ່ມຄົນທີ່ເສື່ອມຊາມນີ້ຈະດັບສູນຢູ່ເທິງແຜ່ນດິນໂລກຢ່າງແນ່ນອນ! ມັນປາກົດວ່າ ພາຍຫຼັງຫຼາຍສະຫັດສະຫວັດ ວິນຍານທີ່ສົກກະປົກຍິ່ງມີເລ່ຫຼ່ຽມ ແລະ ມາຍາຫຼາຍຂຶ້ນ. ພວກເຂົາຄິດເຖິງວິທີທີ່ຈະທຳລາຍພາລະກິດຂອງພຣະເຈົ້າຢ່າງລັບໆຕະຫຼອດ. ດ້ວຍເລ່ຫຼ່ຽມ ແລະ ກົນອຸບາຍຢ່າງຫຼວງຫຼາຍ, ພວກເຂົາປາດຖະໜາທີ່ຈະເຮັດໃຫ້ມີເຫດການໂສກອະນາດຕະກຳແຫ່ງຫຼາຍພັນປີຜ່ານມາເກີດຂຶ້ນອີກຄັ້ງໃນບ້ານເກີດເມືອງນອນຂອງພວກເຂົາ ໂດຍກະຕຸ້ນພຣະເຈົ້າເກືອບເຖິງຈຸດທີ່ຈະຮ້ອງໄຫ້ອອກມາເປັນສຽງດັງໆ. ພຣະອົງເກືອບຈະຢັບຢັ້ງຕົວພຣະອົງບໍ່ໄດ້ຈາກການກັບໄປສະຫວັນຊັ້ນສາມເພື່ອທຳລາຍລ້າງພວກເຂົາ. ສຳລັບມະນຸດທີ່ຈະຮັກພຣະເຈົ້າ ເຂົາຕ້ອງເຂົ້າໃຈຄວາມປະສົງຂອງພຣະອົງ, ຮູ້ຈັກຄວາມສຸກ ແລະ ຄວາມໂສກເສົ້າຂອງພຣະອົງ ແລະ ເຂົ້າໃຈໃນສິ່ງທີ່ພຣະອົງກຽດຊັງ. ການເຮັດແບບນີ້ຈະກະຕຸ້ນການເຂົ້າສູ່ຂອງມະນຸດຫຼາຍຂຶ້ນ. ຍິ່ງການເຂົ້າສູ່ຂອງມະນຸດໄວສໍ່າໃດ ຄວາມປະສົງຂອງພຣະເຈົ້າກໍຍິ່ງເປັນທີ່ພໍໃຈຫຼາຍຊໍ່ານັ້ນ, ຍິ່ງມະນຸດເບິ່ງເຫັນກະສັດຂອງພວກຜີຮ້າຍຊັດເຈນສໍ່າໃດ ເຂົາກໍຍິ່ງເຂົ້າໃກ້ພຣະເຈົ້າຫຼາຍຊໍ່ານັ້ນ ເພື່ອວ່າ ຄວາມປາດຖະໜາຂອງພຣະອົງອາດຈະຖືກເຮັດໃຫ້ເກີດໝາກຜົນ.

# ພາລະກິດ ແລະ ທາງເຂົ້າ (8)

ເຮົາໄດ້ກ່າວຫຼາຍຄັ້ງແລ້ວວ່າ ພາລະກິດຂອງພຣະເຈົ້າຂອງຍຸກສຸດທ້າຍ ແມ່ນຖືກປະຕິບັດເພື່ອປ່ຽນແປງຈິດໃຈຂອງແຕ່ລະຄົນ ແລະ ເພື່ອປ່ຽນແປງຈິດວິນຍານຂອງແຕ່ລະຄົນ ເພື່ອວ່າ ຫົວໃຈຂອງພວກເຂົາທີ່ໄດ້ທົນທຸກກັບຄວາມເຈັບປວດຢ່າງມະຫາສານຈະໄດ້ຖືກປ່ຽນແປງ ແລະ ດ້ວຍເຫດນີ້ກໍຈະເປັນການຊ່ວຍຈິດໃຈຂອງພວກເຂົາທີ່ຖືກເຮັດໃຫ້ເຈັບປວດດ້ວຍຄວາມຊົ່ວຮ້າຍ; ເພື່ອປຸກຈິດວິນຍານຂອງຜູ້ຄົນ, ເພື່ອລະລາຍຫົວໃຈທີ່ເຢັນຊາຂອງພວກເຂົາ ແລະ ເຮັດໃຫ້ພວກເຂົາຟື້ນຄືນອີກຄັ້ງ. ນີ້ຄືຄວາມປະສົງທີ່ຍິ່ງໃຫຍ່ທີ່ສຸດຂອງພຣະເຈົ້າ. ຈົ່ງຢຸດການເວົ້າເຖິງຄວາມສູງສົ່ງ ຫຼື ຄວາມເລິກເຊິ່ງຂອງຊີວິດ ແລະ ປະສົບການຂອງມະນຸດ; ເມື່ອໃຈຂອງຜູ້ຄົນຖືກປຸກໃຫ້ຕື່ນຂຶ້ນ, ເມື່ອພວກເຂົາຖືກປຸກໃຫ້ຕື່ນຈາກຄວາມຝັນຂອງພວກເຂົາ ແລະ ໄດ້ຮູ້ຈັກໄພອັນຕະລາຍທີ່ມັງກອນແດງທີ່ຍິ່ງໃຫຍ່ໄດ້ສ້າງຂຶ້ນເປັນຢ່າງດີ ການປະຕິບັດພັນທະກິດຂອງພຣະເຈົ້າກໍຈະສຳເລັດລົງ. ມື້ທີ່ພາລະກິດຂອງພຣະເຈົ້າຖືກເຮັດໃຫ້ສຳເລັດຍັງເປັນມື້ທີ່ມະນຸດໄດ້ເລີ່ມເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການເຊື່ອໃນພຣະເຈົ້າຢ່າງເປັນທາງການ. ໃນເວລານີ້ ພັນທະກິດຂອງພຣະເຈົ້າກໍຈະສິ້ນສຸດລົງ: ພາລະກິດຂອງພຣະເຈົ້າທີ່ກາຍເປັນເນື້ອໜັງຈະສຳເລັດຢ່າງສົມບູນ ແລະ ມະນຸດຈະເລີ່ມປະຕິບັດໜ້າທີ່ ທີ່ເຂົາຄວນປະຕິບັດຢ່າງເປັນທາງການ ນັ້ນກໍຄື ເຂົາຈະປະຕິບັດພັນທະກິດຂອງຕົນເອງ. ນີ້ແມ່ນຂັ້ນຕອນຕ່າງໆຂອງພາລະກິດຂອງພຣະເຈົ້າ. ສະນັ້ນ, ພວກເຈົ້າຄວນຊອກຫາເສັ້ນທາງຂອງພວກເຈົ້າ ເພື່ອເຂົ້າສູ່ພື້ນຖານໃນການຮູ້ຈັກສິ່ງເຫຼົ່ານີ້. ທັງໝົດນີ້ແມ່ນສິ່ງທີ່ພວກເຈົ້າຄວນເຂົ້າໃຈ. ການເຂົ້າສູ່ຂອງມະນຸດຈະດີຂຶ້ນ ເມື່ອມີການປ່ຽນແປງເກີດຂຶ້ນພາຍໃນໃຈຂອງເຂົາເທົ່ານັ້ນ ຍ້ອນວ່າ ພາລະກິດຂອງພຣະເຈົ້າແມ່ນຄວາມລອດພົ້ນທີ່ສົມບູນຂອງມະນຸດ ນັ້ນກໍຄື ມະນຸດທີ່ຖືກໄຖ່ບາບ, ຜູ້ທີ່ຍັງອາໄສຢູ່ພາຍໃຕ້ອຳນາດແຫ່ງຄວາມມືດ ແລະ ຜູ້ທີ່ບໍ່ໄດ້ປຸກຕົວເອງໃຫ້ຕື່ນຈາກບ່ອນເຕົ້າໂຮມແຫ່ງນີ້ຂອງພວກຜີສາດ; ເພື່ອວ່າ ມະນຸດອາດຈະລອດພົ້ນຈາກພັນປີແຫ່ງຄວາມບາບ ແລະ ເປັນທີ່ຮັກຂອງພຣະເຈົ້າ, ໂຈມຕີມັງກອນແດງທີ່ຍິ່ງໃຫຍ່ໃຫ້ລົ້ມຢ່າງສົມບູນ, ສ້າງຕັ້ງອານາຈັກຂອງພຣະເຈົ້າ ແລະ ນຳເອົາຄວາມສະຫງົບມາສູ່ໃຈຂອງພຣະເຈົ້າໃຫ້ໄວຂຶ້ນກວ່າເກົ່າ; ເພື່ອເປັນການລະບາຍ ໂດຍບໍ່ມີຂໍ້ຈຳກັດ ຕໍ່ຄວາມກຽດຊັງທີ່ບອບຊໍ້າຢູ່ໃນເອິກຂອງພວກເຈົ້າ, ເພື່ອກຳຈັດແມ່ພະຍາດເຊື້ອລາເຫຼົ່ານັ້ນ, ເພື່ອຍອມໃຫ້ພວກເຈົ້າປະຖິ້ມຊີວິດນີ້ ທີ່ບໍ່ແຕກຕ່າງຈາກຊີວິດຂອງງົວ ຫຼື ມ້າ, ເພື່ອບໍ່ເປັນຂ້າທາດອີກຕໍ່ໄປ, ເພື່ອບໍ່ຖືກຢຽບຢໍ່າຢ່າງອຳພັງໃຈອີກຕໍ່ໄປ ຫຼື ຖືກສັ່ງການໂດຍມັງກອນແດງທີ່ຍິ່ງໃຫຍ່; ພວກເຈົ້າຈະບໍ່ແມ່ນຄົນຂອງປະເທດຊາດທີ່ລົ້ມເຫຼວນີ້ອີກຕໍ່ໄປ, ບໍ່ເປັນຂອງມັງກອນແດງທີ່ຍິ່ງໃຫຍ່ທີ່ຊົ່ວຮ້າຍ ແລະ ພວກເຈົ້າຈະບໍ່ຖືກມັນຈັບໄປເປັນທາດອີກຕໍ່ໄປ. ຮັງຂອງພວກຜີສາດຈະຖືກທຳລາຍເປັນຊິ້ນສ່ວນຢ່າງແນ່ນອນ ແລະ ພວກເຈົ້າຈະຢືນຄຽງຂ້າງພຣະເຈົ້າ. ພວກເຈົ້າເປັນຂອງພຣະເຈົ້າ ແລະ ບໍ່ໄດ້ເປັນຂອງຈັກກະພັດແຫ່ງຂ້າທາດດັ່ງກ່າວນີ້. ແຕ່ດົນນານມາແລ້ວ ພຣະເຈົ້າໄດ້ກຽດຊັງສັງຄົມມືດຈົນເຂົ້າກະດູກດຳຂອງພຣະອົງ. ພຣະອົງກັດແຂ້ວຂອງພຣະອົງ, ຕ້ອງການທີ່ຈະເອົາຕີນຂອງພຣະອົງຢຽບເຖົ້າໂຕໃຫຍ່

ອັນຊົ່ວຮ້າຍ ແລະ ຮ້າຍກາດນີ້ທີ່ສຸດ ເພື່ອວ່າ ມັນຈະບໍ່ສາມາດລຸກຂຶ້ນມາອີກຄັ້ງ ແລະ ຈະບໍ່ມີວັນຂົ່ມເຫັງມະນຸດອີກ; ພຣະອົງຈະບໍ່ຍົກໂທດໃຫ້ການກະທຳຂອງມັນໃນອະດີດ, ພຣະອົງຈະບໍ່ອົດທົນຕໍ່ການຫຼອກລວງຂອງມັນທີ່ມີຕໍ່ມະນຸດ ແລະ ພຣະອົງຈະແກ້ແຄ້ນໃຫ້ທຸກຄົນທີ່ໄດ້ຮັບຄວາມຜິດບາບຈາກມັນຕະຫຼອດຍຸກຕ່າງໆ; ພຣະເຈົ້າຈະບໍ່ປ່ອຍຫົວໜ້າຂອງຄວາມຊົ່ວຮ້າຍທັງມວນນີ້[1] ຫຼຸດພົ້ນແມ່ນແຕ່ໜ້ອຍ ໂດຍທີ່ພຣະອົງຈະທຳລາຍມັນຢ່າງສິ້ນເຊີງ.

ເປັນເວລາຫຼາຍພັນປີ ດິນແດນແຫ່ງນີ້ໄດ້ເປັນດິນແດນແຫ່ງຄວາມສົກກະປົກ. ມັນເປື້ອນເຖິງຂັ້ນຮັບບໍ່ໄດ້, ມີຄວາມທຸກທໍລະມານຫຼາຍ, ຜີສາງແລ່ນອາລະວາດທຸກບ່ອນ ທັງໃຊ້ອຸບາຍ ແລະ ຫຼອກລວງ, ກ່າວຫາໂດຍບໍ່ມີຫຼັກຖານ[2], ມີຄວາມອຳມະຫິດ ແລະ ໂຫດຮ້າຍ, ຢຽບຢໍ່າເມືອງຮ້າງແຫ່ງນີ້ ແລະ ປະໃຫ້ມັນເຕັມໄປດ້ວຍຊາກສົບ; ກິ່ນເໝັນຈາກຄວາມເນົ່າເປື່ອຍປົກຄຸມທົ່ວດິນແດນ ແລະ ແຜ່ລາມທົ່ວເທິງອາກາດ ແລະ ດິນແດນແຫ່ງນີ້ແມ່ນມີການເຝົ້າຍາມຢ່າງໜ້າແໜ້ນ[3]. ໃຜສາມາດເຫັນໂລກທີ່ຢູ່ເໜືອທ້ອງຟ້າ? ຜີຮ້າຍໄດ້ມັດຮ່າງກາຍຂອງມະນຸດທຸກຄົນຢ່າງຫັດແໜ້ນ, ມັນປິດຕາທັງສອງຂອງເຂົາ ແລະ ປິດປາກຂອງເຂົາຢ່າງແໜ້ນ. ກະສັດຂອງພວກຜີຮ້າຍໄດ້ອາລະວາດເປັນເວລາຫຼາຍພັນປີ ຈົນຮອດປັດຈຸບັນ ໃນເວລາທີ່ມັນຍັງເຝົ້າເບິ່ງເມືອງຮ້າງ ດັ່ງກັບວ່າ ມັນເປັນພະລາຊະວັງຂອງພວກຜີຮ້າຍທີ່ບໍ່ສາມາດບຸກລຸກເຂົ້າໄດ້; ໃນຂະນະດຽວກັນ ຝູງໝາເຝົ້າຍາມນີ້ກໍຈ້ອງເບິ່ງດ້ວຍສາຍຕາວາດລະແວງ, ມີຄວາມຢ້ານກົວວ່າ ພຣະເຈົ້າຈະຈັບພວກມັນໂດຍທີ່ບໍ່ຮູ້ສຶກຕົວ ແລະ ຈະກວາດລ້າງພວກມັນທັງໝົດ ເຮັດໃຫ້ພວກມັນບໍ່ມີບ່ອນຢູ່ສະຫງົບ ແລະ ມີຄວາມສຸກ. ຜູ້ຄົນຂອງເມືອງຮ້າງແບບນີ້ຈະເຄີຍເຫັນພຣະເຈົ້າໄດ້ແນວໃດ? ພວກເຂົາເຄີຍມີຄວາມສຸກກັບຄວາມເປັນທີ່ຮັກ ແລະ ຄວາມໜ້າຮັກຂອງພຣະເຈົ້າບໍ? ພວກເຂົາສຳນຶກບຸນຄຸນຫຍັງແນ່ ຕໍ່ເລື່ອງຕ່າງໆຂອງໂລກມະນຸດ? ຜູ້ໃດໃນບັນດາພວກເຂົາທີ່ສາມາດເຂົ້າໃຈຄວາມປະສົງອັນແຮງກ້າຂອງພຣະເຈົ້າ? ສະນັ້ນ, ໜ້ອຍຄົນຈຶ່ງສົງໄສວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດຍັງຖືກເຊື່ອງຊ້ອນໄວ້ຢ່າງມິດຊິດ: ໃນສັງຄົມມືດແບບນີ້ ເຊິ່ງເປັນບ່ອນທີ່ພວກຜີສາດມີຄວາມໂຫດຮ້າຍ ແລະ ປ່າເຖື່ອນ, ກະສັດຂອງພວກຜີສາດ ທີ່ໄດ້ຂ້າຄົນໂດຍບໍ່ໄດ້ພິບຕາ ຈະທົນຕໍ່ການມີຢູ່ຂອງພຣະເຈົ້າ ຜູ້ທີ່ໜ້າຮັກ, ໃຈດີ ແລະ ຍັງບໍລິສຸດໄດ້ແນວໃດ? ມັນຈະຕົບມື ແລະ ຮ້ອງເຊຍການສະເດັດມາເຖິງຂອງພຣະເຈົ້າໄດ້ແນວໃດ? ພວກຂີ້ຂ້າເຫຼົ່ານີ້ເອີຍ! ພວກເຂົາຕອບແທນຄວາມໃຈດີດ້ວຍຄວາມກຽດຊັງ, ພວກເຂົາເລີ່ມປະຕິບັດກັບພຣະເຈົ້າວ່າເປັນສັດຕູແຕ່ດົນນານແລ້ວ, ພວກເຂົາຂົ່ມເຫັງພຣະເຈົ້າ, ພວກເຂົາປ່າເຖື່ອນທີ່ສຸດ, ພວກເຂົາບໍ່ນັບຖືພຣະເຈົ້າແມ່ນແຕ່ໜ້ອຍດຽວ, ພວກເຂົາລັກ ແລະ ປຸ້ນ, ພວກເຂົາໄດ້ສູນເສຍສາມັນສຳນຶກທັງໝົດ

---

1 "ຫົວໜ້າຂອງຄວາມຊົ່ວຮ້າຍທັງມວນນີ້" ໝາຍເຖິງຜີສາດເຖົ້າ. ວະລີນີ້ແມ່ນສະແດງໃຫ້ເຫັນເຖິງຄວາມກຽດຊັງທີ່ສຸດ.

2 "ກ່າວຫາໂດຍບໍ່ມີຫຼັກຖານ" ໝາຍເຖິງວິທີການທີ່ຜີສາດຮ້າຍທຳລາຍຜູ້ຄົນ.

3 "ເຝົ້າຍາມຢ່າງໜ້າແໜ້ນ" ໝາຍເຖິງວິທີການທີ່ຜີສາດຮ້າຍໃຊ້ກັບຜູ້ຄົນ ແມ່ນໂຫດຮ້າຍຢ່າງຍິ່ງ ແລະ ຄວບຄຸມຜູ້ຄົນຢ່າງຮຸນແຮງຈົນພວກເຂົາບໍ່ສາມາດເຄື່ອນໄຫວໄດ້.

ແລະ ພວກເຂົາໄດ້ຕໍ່ຕ້ານສາມັນສຳນຶກທັງໝົດ ແລະ ພວກເຂົາໄດ້ລໍ້ລວງໃຫ້ຄົນບໍລິສຸດຂາດສະຕິ. ນີ້ແມ່ນບັນພະບຸລຸດຂອງຄົນສະໄໝບູຮານບໍ? ຜູ້ນໍາທີ່ເປັນທີ່ຮັກບໍ? ພວກເຂົາທຸກຄົນຕໍ່ຕ້ານພຣະເຈົ້າ! ການກ້າວກ່າຍຂອງພວກເຂົາໄດ້ເຮັດໃຫ້ທຸກຄົນທີ່ຢູ່ກ້ອງສະຫວັນຕ້ອງຕົກຢູ່ໃນສະພາບແຫ່ງຄວາມມືດ ແລະ ຄວາມສັບສົນວຸ່ນວາຍ! ນີ້ແມ່ນອິດສະຫຼະທາງສາສະໜາບໍ? ນີ້ແມ່ນສິດທີ່ຖືກຕ້ອງຕາມກົດໝາຍ ແລະ ສິດຜົນປະໂຫຍດຂອງປະຊາຊົນບໍ? ສິ່ງເຫຼົ່ານີ້ແມ່ນກົນລວງເພື່ອປົກປິດບາບ! ແມ່ນໃຜໄດ້ຮັບເອົາພາລະກິດຂອງພຣະເຈົ້າ? ແມ່ນໃຜໄດ້ມອບຊີວິດຂອງພວກເຂົາ ຫຼື ສະຫຼະເລືອດຂອງຕົວເອງເພື່ອພາລະກິດຂອງພຣະເຈົ້າ? ຫຼາຍຊົ່ວອາຍຸຄົນ ນັບຈາກພໍ່ແມ່ຫາລູກ, ມະນຸດທີ່ຖືກຈັບໄປເປັນທາດໄດ້ຈັບພຣະເຈົ້າໄປເປັນທາດແບບບໍ່ມີພິທີລີຕອງ ແລ້ວນີ້ຈະບໍ່ເຮັດໃຫ້ມີຄວາມໂມໂຫໄດ້ແນວໃດ? ພັນປີແຫ່ງຄວາມກຽດຊັງແມ່ນຝັງເລິກຢູ່ໃນຫົວໃຈ, ຄວາມບາບໜາເປັນພັນປີແມ່ນຖືກຈາລຶກໃສ່ຫົວໃຈແລ້ວນີ້ຈະບໍ່ເຮັດໃຫ້ເກີດມີຄວາມກຽດຊັງໄດ້ແນວໃດ? ຈົ່ງແກ້ແຄ້ນໃຫ້ກັບພຣະເຈົ້າ, ເຮັດໃຫ້ສັດຕູຂອງພຣະອົງດັບສູນໃຫ້ໝົດ, ຢ່າຍອມໃຫ້ມັນແລ່ນອາລະວາດອີກຕໍ່ໄປ ແລະ ຢ່າຍອມໃຫ້ມັນປົກຄອງເປັນຜະເດັດການ! ດຽວນີ້ແມ່ນເຖິງເວລາແລ້ວ: ແຕ່ດົນນານ ມະນຸດໄດ້ເຕົ້າໂຮມກຳລັງທັງໝົດຂອງເຂົາ, ເຂົາໄດ້ອຸທິດຄວາມພະຍາຍາມທັງໝົດຂອງເຂົາ ແລະ ເສຍສະຫຼະທຸກຢ່າງເພື່ອສິ່ງນີ້, ເພື່ອຈີກໃບໜ້າທີ່ເປັນຕາຢ້ານຂອງຜີສາດນີ້ ແລະ ເຮັດໃຫ້ຜູ້ຄົນ ທີ່ຖືກບັງຕາ ແລະ ຜູ້ທີ່ໄດ້ທົນຕໍ່ຄວາມທຸກທໍລະມານ ແລະ ຄວາມລຳບາກໃນທຸກຮູບແບບ ໄດ້ລຸກຂຶ້ນຈາກຄວາມເຈັບປວດຂອງພວກເຂົາ ແລະ ຫັນຫຼັງຂອງພວກເຂົາໃຫ້ກັບຜີສາດເຖົ້າທີ່ຊົ່ວຮ້າຍນີ້. ເປັນຫຍັງຈຶ່ງສ້າງອຸປະສັກທີ່ບໍ່ສາມາດແກ້ໄຂຕໍ່ພາລະກິດຂອງພຣະເຈົ້າ? ເປັນຫຍັງຈຶ່ງໃຊ້ເລ່ກົນເພື່ອຫຼອກລວງຄົນຂອງພຣະເຈົ້າ? ອິດສະຫຼະທີ່ແທ້ຈິງ ແລະ ສິດ ແລະ ສິດຜົນປະໂຫຍດທີ່ຖືກຕ້ອງມີຢູ່ໃສ? ຄວາມຍຸຕິທຳຢູ່ໃສ? ຄວາມສຸກສະບາຍຢູ່ໃສ? ຄວາມອົບອຸ່ນຢູ່ໃສ? ເປັນຫຍັງຈຶ່ງໃຊ້ອຸບາຍຫຼອກລວງເພື່ອຕົວະຄົນຂອງພຣະເຈົ້າ? ເປັນຫຍັງຈຶ່ງໃຊ້ກຳລັງເພື່ອຢັບຢັ້ງການສະເດັດມາຂອງພຣະເຈົ້າ? ເປັນຫຍັງຈຶ່ງບໍ່ຍອມໃຫ້ພຣະເຈົ້າຄະເນຈອນຢູ່ເທິງແຜ່ນດິນໂລກທີ່ພຣະອົງຊົງສ້າງຂຶ້ນຢ່າງເປັນອິດສະຫຼະ? ເປັນຫຍັງຈຶ່ງລົບກວນພຣະເຈົ້າຈົນພຣະອົງບໍ່ມີບ່ອນທີ່ຈະພັກຫົວຂອງພຣະອົງລົງ? ຄວາມອົບອຸ່ນໃນທ່າມກາງມະນຸດຢູ່ໃສ? ການຕ້ອນຮັບໃນທ່າມກາງມະນຸດຢູ່ໃສ? ເປັນຫຍັງຈຶ່ງສະແຫວງຫາພຣະເຈົ້າແບບບໍ່ມີຫວັງ? ເປັນຫຍັງຈຶ່ງເຮັດໃຫ້ພຣະເຈົ້າຮ້ອງອອກມາຊໍ້າແລ້ວຊໍ້າອີກ? ເປັນຫຍັງຈຶ່ງເຮັດໃຫ້ພຣະເຈົ້າກັງວົນກັບບຸດຊາຍທີ່ເປັນທີ່ຮັກຂອງພຣະອົງ? ໃນສັງຄົມມືດນີ້ ເປັນຫຍັງໝາເຝົ້າຍາມທີ່ເປັນຕາສົມເພດຂອງມັນບໍ່ຍອມໃຫ້ພຣະເຈົ້າສະເດັດໄປໆມາໆຢ່າງອິດສະຫຼະທົ່ວໂລກທີ່ພຣະອົງຊົງສ້າງ? ເປັນຫຍັງມະນຸດ ທີ່ດຳລົງຊີວິດໃນທ່າມກາງຄວາມເຈັບປວດ ແລະ ຄວາມທຸກທໍລະມານຈຶ່ງບໍ່ເຂົ້າໃຈ? ເພື່ອພວກເຈົ້າແລ້ວ, ພຣະເຈົ້າໄດ້ອົດທົນຕໍ່ຄວາມທໍລະມານຢ່າງໃຫຍ່ຫຼວງ, ໄດ້ປະທານບຸດຊາຍທີ່ເປັນທີ່ຮັກຂອງພຣະອົງ, ເນື້ອໜັງ ແລະ ເລືອດຂອງພຣະອົງໃຫ້ພວກເຈົ້າດ້ວຍຄວາມເຈັບປວດ ແລ້ວເປັນຫຍັງພວກເຈົ້າຈຶ່ງຍັງເມີນເສີຍຢູ່? ໃນລັກສະນະລວມຂອງທຸກຄົນ, ພວກເຈົ້າໄດ້ປະຕິເສດການສະເດັດມາຮອດຂອງພຣະເຈົ້າ ແລະ ໄດ້ປະຕິເສດມິດຕະພາບຂອງພຣະເຈົ້າ. ເປັນຫຍັງຈຶ່ງບໍ່ມີສາມັນສຳນຶກເຖິງຂະໜາດນັ້ນ? ພວກເຈົ້າ

ເຕັມໃຈບໍ ທີ່ຈະທົນຕໍ່ຄວາມບໍ່ຍຸຕິທຳໃນສັງຄົມມືດແບບນີ້? ແທນທີ່ຈະຍັດທ້ອງຂອງພວກເຈົ້າໃຫ້ອີ່ມກັບຄວາມກຽດຊັງນັບພັນປີ, ເປັນຫຍັງພວກເຈົ້າຈຶ່ງຍັດທ້ອງຕົນເອງດ້ວຍ "ຂີ້" ຂອງກະສັດຂອງພວກຜີຮ້າຍ?

ພາລະກິດຂອງພຣະເຈົ້າແມ່ນມີອຸປະສັກຫຼາຍສໍ່າໃດ? ມີໃຜເຄີຍຮູ້ແນ່? ໃນເມື່ອຜູ້ຄົນຖືກກັກຂັງໂດຍສີແຫ່ງຄວາມງົມງວາຍຢ່າງຝັງເລິກ ແລ້ວມີໃຜທີ່ມີຄວາມສາມາດໃນການຮູ້ຈັກໃບໜ້າທີ່ແທ້ຈິງຂອງພຣະເຈົ້າ? ດ້ວຍຄວາມຮູ້ທາງວັດທະນະທຳທີ່ຫຼ້າຫຼັງ ພ້ອມທັງຕື້ນ ແລະ ບໍ່ສົມເຫດສົມຜົນນີ້ ພວກເຂົາຈະສາມາດເຂົ້າໃຈພຣະທຳທີ່ກ່າວໂດຍພຣະເຈົ້າຢ່າງຄົບຖ້ວນໄດ້ແນວໃດ? ແມ່ນແຕ່ໃນເວລາທີ່ມີການເວົ້າກັບພວກເຂົາເຊິ່ງໆໜ້າ ແລະ ຖືກບຳລຸງລ້ຽງປາກຕໍ່ປາກ, ພວກເຂົາຈະສາມາດເຂົ້າໃຈໄດ້ແນວໃດ? ບາງຄັ້ງ ມັນຄືກັບວ່າ ພຣະທຳຂອງພຣະເຈົ້າໄດ້ຖືກຟັງດ້ວຍຫູໜວກ: ຜູ້ຄົນບໍ່ມີປະຕິກິລິຍາແມ່ນແຕ່ໜ້ອຍດຽວ, ພວກເຂົາພາກັນແກວ່ງຫົວ ແລະ ບໍ່ເຂົ້າໃຈຫຍັງເລີຍ. ແລ້ວນີ້ຈະບໍ່ໃຫ້ກັງວົນໃຈໄດ້ແນວໃດ? "ໄລຍະຫ່າງ[4], ຂອງປະຫວັດສາດທາງວັດທະນະທຳບູຮານ ແລະ ຄວາມຮູ້ທາງວັດທະນະທຳນີ້" ໄດ້ສັ່ງສອນກຸ່ມຄົນທີ່ບໍ່ມີປະໂຫຍດຫຍັງ. ວັດທະນະທຳບູຮານນີ້ ນັ້ນກໍຄືມໍລະດົກອັນລ້ຳຄ່ານີ້ ແມ່ນກອງຂີ້ເຫຍື້ອ! ມັນໄດ້ກາຍເປັນຄວາມອັບອາຍຕະຫຼອດການແຕ່ດົນນານແລ້ວ ແລະ ກໍບໍ່ຄຸ້ມທີ່ຈະກ່າວເຖິງ! ມັນໄດ້ສອນເລ່ກົນ ແລະ ເຕັກນິກໃນການຕໍ່ຕ້ານພຣະເຈົ້າໃຫ້ກັບຜູ້ຄົນ ແລະ "ອອກຄຳສັ່ງ ໃນການຊີ້ນຳທີ່ອ່ອນໂຍນ"[5] ຂອງລະບົບການສຶກສາແຫ່ງຊາດທີ່ເຮັດໃຫ້ຜູ້ຄົນຍິ່ງບໍ່ເຊື່ອຟັງພຣະເຈົ້າ. ພາລະກິດຂອງພຣະເຈົ້າແຕ່ລະສ່ວນແມ່ນມີຄວາມຍາກລຳບາກຫຼາຍ ແລະ ທຸກຂັ້ນຕອນຂອງພາລະກິດຂອງພຣະອົງຕໍ່ແຜ່ນດິນໂລກກໍເປັນຕາເສົ້າໃຈສຳລັບພຣະເຈົ້າ. ພາລະກິດຂອງພຣະອົງເທິງແຜ່ນດິນໂລກຊ່າງມາຍາກລຳບາກແທ້ເດ! ຂັ້ນຕອນຂອງພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກແມ່ນປະກອບດ້ວຍຄວາມຍຸ້ງຍາກຫຼາຍ: ເນື່ອງຈາກຄວາມອ່ອນແອ, ຄວາມຂາດເຂີນ, ການປະພຶດຕົວຄືເດັກນ້ອຍ, ຄວາມໂງ່ຂອງມະນຸດ ແລະ ທຸກສິ່ງທີ່ເປັນຂອງມະນຸດ, ພຣະເຈົ້າຈຶ່ງສ້າງແຜນຂຶ້ນຢ່າງລະອຽດ ແລະ ມີການພິຈາລະນາຢ່າງຮອບຄອບ. ມະນຸດແມ່ນຄ້າຍຄືກັບເສືອເຈ້ຍ ທີ່ຄົນເຮົາບໍ່ກ້າທີ່ຈະລໍ້ ຫຼື ຍົວະ; ພຽງແຕ່ໄປຈັບຕ້ອງບາຍໜ້ອຍໜຶ່ງ ເຂົາກໍຈະກັດ ຫຼື ບໍ່ຊັ້ນກໍລົ້ມລົງ ແລ້ວກໍບໍ່ຮູ້ຈະເຮັດຫຍັງອີກຕໍ່ໄປ ແລະ ຄືກັບວ່າ ຖ້າມີການເສຍສະມາທິແມ່ນແຕ່ໜ້ອຍໜຶ່ງ ເຂົາກໍຈະກັບຄືນສູ່ສະພາບເດີມ ຫຼື ບໍ່ຊັ້ນກໍຈະເມີນເສີຍຕໍ່ພຣະເຈົ້າ ຫຼື ແລ່ນໄປຫາພໍ່ແມ່ໝູ ແລະ ໝາຂອງເຂົາ ເພື່ອເພີດເພີນໃນສິ່ງທີ່ເປິເປື້ອນຂອງຮ່າງກາຍຂອງພວກເຂົາ. ຈັ່ງແມ່ນເປັນອຸປະສັກທີ່ໃຫຍ່ຫຼວງແທ້ໆ! ໃນພາກປະຕິບັດໃນທຸກຂັ້ນຕອນຂອງພາລະກິດຂອງພຣະອົງ, ພຣະເຈົ້າແມ່ນຖືກລໍ້ລວງ ແລະ ໃນເກືອບທຸກຂັ້ນຕອນ ພຣະເຈົ້າແມ່ນມີຄວາມສ່ຽງຈາກໄພອັນຕະລາຍຢ່າງມະຫາສານ. ພຣະທຳຂອງພຣະອົງແມ່ນຈິງໃຈ ແລະ ສັດຊື່ ໂດຍທີ່ບໍ່ມີເຈດຕະນາຮ້າຍ ແຕ່ມີໃຜແດ່ທີ່ເຕັມໃຈຍອມເອົາພຣະທຳ

4 "ໄລຍະຫ່າງ" ແມ່ນຖືກໃຊ້ເພື່ອເປັນການເຍາະເຍີ້ຍ.

5 "ອອກຄຳສັ່ງ ໃນການຊີ້ນຳທີ່ອ່ອນໂຍນ" ແມ່ນຖືກໃຊ້ເພື່ອເປັນການເຍາະເຍີ້ຍ.

ເຫຼົ່ານັ້ນ? ແມ່ນໃຜເຕັມໃຈທີ່ຈະຍອມເຮັດຕາມຢ່າງເຕັມທີ່? ມັນເຮັດໃຫ້ຫົວໃຈຂອງພຣະເຈົ້າແຕກຫັກ. ພຣະອົງເຮັດພາລະກິດຢ່າງໜັກທັງຕອນກາງເວັນ ແລະ ກາງຄືນເພື່ອມະນຸດ, ພຣະອົງຖືກລົບກວນດ້ວຍຄວາມກະວົນກະວາຍໃຈທີ່ມີຕໍ່ຊີວິດຂອງມະນຸດ ແລະ ພຣະອົງເຫັນອົກເຫັນໃຈຕໍ່ຄວາມອ່ອນແອຂອງມະນຸດ. ພຣະອົງໄດ້ອົດທົນກັບການພິກໄປພິກມາໃນແຕ່ລະຂັ້ນຕອນຂອງພາລະກິດຂອງພຣະອົງ, ເພື່ອພຣະທຳທຸກຂໍ້ທີ່ພຣະອົງກ່າວ; ພຣະອົງແມ່ນຢູ່ລະຫວ່າງກ້ອນຫີນ ແລະ ບ່ອນແຂງຕະຫຼອດ ແລະ ຄິດເຖິງຄວາມອ່ອນແອ, ຄວາມບໍ່ເຊື່ອຟັງ, ການປະພຶດຕົວຄືເດັກນ້ອຍ ແລະ ຄວາມບອບບາງຂອງມະນຸດ... ທັງກາງເວັນກາງຄືນຊໍ້າແລ້ວຊໍ້າອີກ. ແມ່ນໃຜທີ່ເຄີຍຮູ້ຈັກສິ່ງນີ້ແດ່? ແມ່ນໃຜທີ່ສາມາດເປີດເຜີຍຄວາມລັບໄດ້? ແມ່ນໃຜທີ່ຈະສາມາດເຂົ້າໃຈ? ພຣະອົງກຽດຊັງຄວາມບາບຂອງມະນຸດ, ການຂາດຄວາມກ້າ ແລະ ການບໍ່ມີຄວາມເຂັ້ມແຂງຂອງມະນຸດ ແລະ ພຣະອົງເປັນຫ່ວງຕໍ່ຄວາມບອບບາງຂອງມະນຸດຢູ່ສະເໝີ ແລະ ພິຈາລະນາເສັ້ນທາງອະນາຄົດຂອງມະນຸດ. ໃນຂະນະທີ່ພຣະອົງສັງເກດເບິ່ງຄຳເວົ້າ ແລະ ການກະທຳຂອງມະນຸດ ພຣະອົງກໍເຕັມໄປດ້ວຍຄວາມເມດຕາ ແລະ ຄວາມໂມໂຫຕະຫຼອດເວລາ ແລະ ການເຫັນສິ່ງເຫຼົ່ານີ້ແມ່ນນຳເອົາຄວາມເຈັບປວດມາສູ່ໃຈຂອງພຣະອົງ. ຢ່າງໃດກໍຕາມ ຜູ້ບໍລິສຸດກໍຈະແຂງກະດ້າງ; ເປັນຫຍັງພຣະເຈົ້າຈຶ່ງຕ້ອງເຮັດສິ່ງຕ່າງໆໃຫ້ຍາກສຳລັບພວກເຂົາຢູ່ຕະຫຼອດເວລາ? ມະນຸດທີ່ອ່ອນແອແມ່ນສູນເສຍຄວາມອົດທົນ; ເປັນຫຍັງພຣະເຈົ້າຈຶ່ງມີຄວາມໂກດຮ້າຍຢູ່ເລື້ອຍໆກັບພວກເຂົາເຫຼົ່ານີ້? ມະນຸດທີ່ອ່ອນແອ ແລະ ບໍ່ມີພະລັງແມ່ນບໍ່ມີກຳລັງອີກຕໍ່ໄປ; ເປັນຫຍັງພຣະເຈົ້າຈຶ່ງຄວນຮ້າຍພວກເຂົາຕະຫຼອດສຳລັບຄວາມບໍ່ເຊື່ອຟັງຂອງພວກເຂົາ? ແມ່ນໃຜທີ່ສາມາດຕ້ານທານຄວາມເປັນຕາຢ້ານຂອງພຣະເຈົ້າໃນສະຫວັນໄດ້ແດ່? ຢ່າງໃດກໍຕາມ, ມະນຸດແມ່ນອ່ອນແອ ແລະ ຢູ່ໃນສະພາບຍາກລຳບາກຢ່າງສິ້ນຫວັງ ເຊິ່ງພຣະເຈົ້າໄດ້ອົດກັ້ນຄວາມໂກດຮ້າຍຂອງພຣະອົງໄວ້ຢູ່ໃນສ່ວນເລິກຂອງຫົວໃຈຂອພຣະອົງ ເພື່ອວ່າ ມະນຸດຈະຄ່ອຍໆໄຕ່ຕອງຕົວເອງ. ແຕ່ມະນຸດ ຜູ້ທີ່ຢູ່ໃນຄວາມລຳບາກທີ່ຮ້າຍແຮງ ແມ່ນບໍ່ຮູ້ບຸນຄຸນຕໍ່ຄວາມປະສົງຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ; ມະນຸດຖືກກະສັດເຖົ້າຂອງພວກຜີຮ້າຍຢຽບຢໍ່າຢູ່ກ້ອງຕີນໂດຍທີ່ເຂົາບໍ່ຮູ້ສຶກຕົວ, ເຂົາເອົາຕົວເອງໄປຕໍ່ຕ້ານພຣະເຈົ້າ ຫຼື ບໍ່ຊັ້ນເຂົາກໍບໍ່ຮູ້ຮ້ອນບໍ່ຮູ້ໜາວຕໍ່ພຣະເຈົ້າ. ພຣະເຈົ້າໄດ້ກ່າວພຣະທຳຫຼາຍຂໍ້ ແຕ່ໃຜໄດ້ຖືເອົາພຣະທຳເຫຼົ່ານັ້ນຢ່າງຈິງຈັງແດ່? ມະນຸດບໍ່ເຂົ້າໃຈພຣະທຳຂອງພຣະເຈົ້າ ແຕ່ເຂົາຍັງສະບາຍໃຈ ແລະ ບໍ່ມີຄວາມປາຖະໜາຫຍັງ ແລະ ບໍ່ເຄີຍຮູ້ຈັກແກ່ນແທ້ຂອງຜີສາດເຖົ້າຢ່າງແທ້ຈິງ. ຜູ້ຄົນອາໄສຢູ່ແດນມໍລະນາ, ໃນນະຮົກ ແຕ່ເຊື່ອວ່າ ພວກເຂົາອາໄສຢູ່ໃນພະລາຊະວັງແຫ່ງພື້ນທະເລ; ພວກເຂົາຖືກຂົ່ມເຫັງໂດຍມັງກອນແດງທີ່ຍິ່ງໃຫຍ່ ແຕ່ກໍຄິດວ່າ ຕົນເອງ “ຖືກຍົກຍ້ອງ”[6] ໂດຍປະເທດຊາດ; ພວກເຂົາຖືກເຍາະເຍີ້ຍໂດຍຜີຮ້າຍ ແຕ່ກໍຄິດວ່າ ພວກເຂົາມີຄວາມສຸກກັບຄວາມສາມາດສູງສຸດທາງດ້ານສິລະປະຂອງເນື້ອໜັງ. ຈັ່ງແມ່ນພວກເຂົາຊ່າງເປັນຄົນຊົ່ວທີ່ສົກກະປົກ ແລະ ຕໍ່າຕ້ອຍແທ້ໆ! ມະນຸດໄດ້ພົບກັບຄວາມໂຊກຮ້າຍ ແຕ່ພວກເຂົາບໍ່ຮູ້ສຶກຕົວ ແລະ

6 “ຖືກຍົກຍ້ອງ” ແມ່ນໃຊ້ເພື່ອເຍາະເຍີ້ຍຜູ້ຄົນ ທີ່ແຂງກະດ້າງ ແລະ ບໍ່ຮັບຮູ້ຕົວເອງ.

ໃນສັງຄົມມືດແຫ່ງນີ້ ເຂົາໄດ້ທົນທຸກກັບເຄາະຮ້າຍຢ່າງຊໍ້າແລ້ວຊໍ້າອີກ[7] ແຕ່ບໍ່ເຄີຍຕື່ນຈາກສິ່ງນີ້. ເມື່ອໃດເຂົາຈະປະຖິ້ມຄວາມໃສ່ໃຈກັບຕົວເອງ ແລະ ອຸປະນິໄສທີ່ຄ້າຍຄືທາດ? ເປັນຫຍັງເຂົາຄືບໍ່ສົນໃຈຫົວໃຈຂອງພຣະເຈົ້າ? ເຂົາຍອມຮັບເອົາການກົດຂີ່ ແລະ ຄວາມທຸກທໍລະມານນີ້ຢ່າງງຽບໆບໍ? ເຂົາບໍ່ປາດຖະໜາເຖິງມື້ທີ່ເຂົາຈະສາມາດປ່ຽນຄວາມມືດເປັນແສງສະຫວ່າງບໍ? ເຂົາບໍ່ປາດຖະໜາທີ່ຈະແກ້ໄຂຄວາມບໍ່ຍຸຕິທຳທີ່ມີຕໍ່ຄວາມຊອບທຳ ແລະ ຄວາມຈິງອີກຄັ້ງບໍ? ເຂົາເຕັມໃຈທີ່ຈະເບິ່ງ ແລະ ບໍ່ເຮັດຫຍັງບໍ ໃນຂະນະທີ່ຜູ້ຄົນປະຖິ້ມຄວາມຈິງ ແລະ ບິດເບືອນຄວາມຈິງ? ເຂົາມີຄວາມສຸກບໍ ກັບການອົດທົນຕໍ່ການກົດຂີ່ຂົ່ມເຫັງນີ້? ເຂົາເຕັມໃຈທີ່ຈະເປັນທາດບໍ? ເຂົາເຕັມໃຈທີ່ຈະດັບສະຫຼາຍດ້ວຍມືຂອງພຣະເຈົ້າ ໄປພ້ອມກັບທາດຂອງລັດທີ່ລົ້ມເຫຼວນີ້ບໍ? ຄວາມຕັ້ງໃຈຂອງເຈົ້າຢູ່ໃສ? ຄວາມທະເຍີທະຍານຂອງເຈົ້າຢູ່ໃສ? ກຽດສັກສີຂອງເຈົ້າຢູ່ໃສ? ຄວາມຊື່ສັດຂອງເຈົ້າຢູ່ໃສ? ອິດສະຫຼະຂອງເຈົ້າຢູ່ໃສ? ເຈົ້າເຕັມໃຈທີ່ຈະເສຍສະຫຼະທັງຊີວິດ[8] ຂອງເຈົ້າເພື່ອມັງກອນແດງທີ່ຍິ່ງໃຫຍ່ ນັ້ນກໍຄືກະສັດຂອງພວກຜີຮ້າຍເຫຼົ່ານັ້ນບໍ? ເຈົ້າມີຄວາມສຸກບໍ ທີ່ໃຫ້ມັນທໍລະມານເຈົ້າຈົນຕາຍ? ມະຫາສະໝຸດອັນກວ້າງໃຫຍ່ໄພສານເຕັມໄປດ້ວຍຄວາມສັບສົນ ແລະ ຄວາມມືດ ໃນຂະນະທີ່ຄົນທົ່ວໄປແມ່ນທົນທຸກກັບຄວາມທຸກທໍລະມານດັ່ງກ່າວ ພາກັນຮ້ອງໄຫ້ຕໍ່ສະຫວັນ ແລະ ຕຳນິແຜ່ນດິນໂລກ. ເມື່ອໃດມະນຸດຈຶ່ງຈະສາມາດພູມໃຈໃນຕົວເອງ? ມະນຸດແມ່ນຈ່ອຍເຫຼືອງ ແລະ ຊຸດໂຊມຫຼາຍ ແລ້ວເຂົາຈະສາມາດຕໍ່ສູ້ກັບຜີສາດທີ່ໂຫດຮ້າຍ ແລະ ພະເດັດການນີ້ໄດ້ແນວໃດ? ເປັນຫຍັງເຂົາຄືບໍ່ມອບຊີວິດຂອງເຂົາໃຫ້ແກ່ພຣະເຈົ້າໃຫ້ໄວທີ່ສຸດເທົ່າທີ່ເຂົາຈະສາມາດເຮັດໄດ້? ເປັນຫຍັງເຂົາຈຶ່ງຍັງລັງເລໃຈ? ເມື່ອໃດເຂົາຈຶ່ງຈະສາມາດເຮັດພາລະກິດຂອງພຣະເຈົ້າໄດ້ສຳເລັດ? ຍ້ອນຖືກຂົ່ມເຫັງ ແລະ ກົດຂີ່ຢ່າງບໍ່ມີເປົ້າໝາຍ, ດ້ວຍເຫດນັ້ນ ໃນທີ່ສຸດແລ້ວ ຊີວິດທັງໝົດຂອງເຂົາກໍຈະຖືກດຳລົງຢູ່ໂດຍບໍ່ມີປະໂຫຍດຫຍັງ; ເປັນຫຍັງເຂົາຈຶ່ງຟ້າວມາ ແລະ ຟ້າວໜີໄປ? ເປັນຫຍັງເຂົາຈຶ່ງບໍ່ເກັບບາງສິ່ງທີ່ມີຄ່າເພື່ອມອບໃຫ້ພຣະເຈົ້າ? ເຂົາໄດ້ລືມຄວາມກຽດຊັງນັບເປັນພັນປີແລ້ວບໍ?

ບາງເທື່ອ ຫຼາຍຄົນກຽດຊັງພຣະທຳບາງຂໍ້ຂອງພຣະເຈົ້າ ຫຼື ບາງເທື່ອ ພວກເຂົາບໍ່ໄດ້ກຽດຊັງພຣະທຳເຫຼົ່ານັ້ນ ແລະ ບໍ່ໄດ້ມີຄວາມສົນໃຈພຣະທຳເຫຼົ່ານັ້ນ. ຢ່າງໃດກໍຕາມ, ຄວາມຈິງບໍ່ສາມາດກາຍເປັນການໃຫ້ເຫດຜົນທີ່ບໍ່ສົມເຫດສົມຜົນ; ບໍ່ມີໃຜອາດເວົ້າຄຳເວົ້າທີ່ຂັດແຍ້ງກັບຄວາມຈິງ. ພຣະເຈົ້າໄດ້ກາຍເປັນເນື້ອໜັງໃນເວລານີ້ ເພື່ອເຮັດພາລະກິດດັ່ງກ່າວ ເພື່ອສິ້ນສຸດພາລະກິດທີ່ພຣະອົງຍັງເຮັດບໍ່ສຳເລັດ, ເພື່ອປິດຍຸກນີ້ລົງ, ເພື່ອພິພາກສາຍຸກນີ້, ເພື່ອຊ່ວຍຜູ້ທີ່ບາບໜາຈາກໂລກຂອງທະເລແຫ່ງຄວາມທົນທຸກໃຫ້ພົ້ນ ແລະ ປ່ຽນແປງພວກເຂົາຢ່າງສິ້ນເຊີງ. ຊາວຢິວໄດ້ຕອກພຣະເຈົ້າໃສ່ໄມ້ກາງແຂນ ເຊິ່ງດ້ວຍເຫດນັ້ນ ກໍເປັນການຢຸດຕິການເດີນທາງຂອງພຣະເຈົ້າຢູ່ທີ່ຢູເດຍ. ຫຼັງຈາກນັ້ນບໍ່ດົນ

7 "ທົນທຸກກັບເຄາະຮ້າຍຢ່າງຊໍ້າແລ້ວຊໍ້າອີກ" ໝາຍເຖິງຜູ້ຄົນເກີດໃນດິນແດນຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ພວກເຂົາບໍ່ສາມາດມີຄວາມພາກພູມໃຈໃນຕົວເອງໄດ້.

8 "ເສຍສະຫຼະທັງຊີວິດ" ແມ່ນມີຄວາມໝາຍໃນທາງທີ່ເສື່ອມເສຍ.

ພຣະເຈົ້າໄດ້ສະເດັດມາທ່າມກາງມະນຸດດ້ວຍຕົວເອງອີກຄັ້ງ ໂດຍໄດ້ສະເດັດມາເຖິງປະເທດຂອງມັງກອນແດງທີ່ຍິ່ງໃຫຍ່ຢ່າງງຽບໆ. ທີ່ຈິ່ງແລ້ວ ຊຸມຊົນທາງສາສະໜາຂອງລັດຢິວໄດ້ຫ້ອຍຮູບພາບຂອງພຣະເຢຊູຢູ່ເທິງຝາເຮືອນຂອງພວກເຂົາແຕ່ດົນນານແລ້ວ ແລະ ຈາກປາກຂອງພວກເຂົາ ຜູ້ຄົນກໍພາກັນຮ້ອງອອກວ່າ “ພຣະເຢຊູຄຣິດເຈົ້າ”. ພວກເຂົາບໍ່ຮູ້ເລີຍວ່າ ແຕ່ດົນນານມາແລ້ວ ພຣະເຢຊູໄດ້ຍອມຮັບເອົາຄຳສັ່ງຂອງພຣະບິດາຂອງພຣະອົງ ເພື່ອກັບຄືນໄປຢູ່ທ່າມກາງມະນຸດ ເພື່ອສຳເລັດຂັ້ນຕອນທີສອງຂອງພາລະກິດທີ່ຍັງບໍ່ສຳເລັດຂອງພຣະອົງ. ດ້ວຍເຫດນັ້ນ ຜູ້ຄົນຈິ່ງຕົກໃຈ ເມື່ອພວກເຂົາແນມເບິ່ງພຣະອົງ: ພຣະອົງໄດ້ເກີດໃນທ່າມກາງໂລກ ທີ່ຫຼາຍຍຸກສະໄໝໄດ້ຜ່ານພົ້ນໄປ ແລະ ພຣະອົງປາກົດໃນທ່າມກາງມະນຸດດ້ວຍຮູບຮ່າງໜ້າຕາຂອງຄົນທີ່ທຳມະດາທີ່ສຸດ. ທີ່ຈິງແລ້ວ ເມື່ອຍຸກສະໄໝໄດ້ຜ່ານພົ້ນໄປ ເຄື່ອງນຸ່ງ ແລະ ຮູບຮ່າງທັງໝົດຂອງພຣະອົງກໍໄດ້ປ່ຽນແປງໄປເຊັ່ນກັນ ຄືກັບວ່າພຣະອົງໄດ້ເກີດໃໝ່. ຜູ້ຄົນຈະສາມາດຮູ້ໄດ້ແນວໃດວ່າ ພຣະອົງແມ່ນພຣະເຢຊູຄຣິດເຈົ້າຜູ້ເກົ່າ ທີ່ໄດ້ສະເດັດມາຈາກໄມ້ກາງແຂນ ແລະ ຟື້ນຄືນຊີບຂຶ້ນມາໃໝ່? ພຣະອົງບໍ່ມີຮ່ອງຮອຍຂອງການບາດເຈັບແມ່ນແຕ່ໜ້ອຍດຽວ ຄືກັນກັບວ່າ ພຣະເຢຊູບໍ່ມີຄວາມຄ້າຍຄືກັບພຣະເຢໂຮວາເລີຍ. ພຣະເຢຊູໃນປັດຈຸບັນ ແມ່ນບໍ່ໄດ້ມີກິລິຍາທ່າທາງເໝືອນດັ່ງໃນອະດີດ. ແລ້ວຜູ້ຄົນຈະຮູ້ຈັກພຣະອົງໄດ້ແນວໃດ? “ໂທມາ” ຜູ້ຫຼອກລວງໄດ້ສົງໄສຕະຫຼອດວ່າ ພຣະອົງແມ່ນພຣະເຢຊູທີ່ຟື້ນຄືນຊີບມາບໍ ແລະ ລາວຕ້ອງການເບິ່ງຮອຍແປ້ວຈາກຕະປູທີ່ຕອກໃສ່ມືຂອງພຣະເຢຊູຕະຫຼອດ ກ່ອນລາວຈະເຊົາສົງໄສ; ຖ້າບໍ່ເຫັນສິ່ງເຫຼົ່ານັ້ນ ລາວກໍຈະຢືນຢູ່ເທິງກ້ອນເມກແຫ່ງຄວາມສົງໄສຕະຫຼອດໄປ ແລະ ບໍ່ສາມາດວາງຕີນຂອງລາວລົງໃສ່ພື້ນດິນ ແລະ ຕິດຕາມພຣະເຢຊູໄດ້. “ໂທມາ” ຜູ້ໜ້າສັງເວດເອີຍ. ລາວຈະສາມາດຮູ້ໄດ້ແນວໃດວ່າ ພຣະເຢຊູໄດ້ສະເດັດມາເພື່ອປະຕິບັດພາລະກິດທີ່ມອບໝາຍໃຫ້ໂດຍພຣະເຈົ້າພຣະບິດາ? ເປັນຫຍັງພຣະເຢຊູຈິ່ງຕ້ອງມີຮອຍແປ້ວຈາກການຖືກຄຶງຢູ່ເທິງໄມ້ກາງແຂນ? ຮອຍແປ້ວຈາກການຖືກຄຶງຢູ່ເທິງໄມ້ກາງແຂນແມ່ນຮອຍຂອງພຣະເຢຊູບໍ? ພຣະອົງໄດ້ສະເດັດມາປະຕິບັດພາລະກິດ ເພື່ອຄວາມປະສົງຂອງພຣະບິດາຂອງພຣະອົງ; ເປັນຫຍັງພຣະອົງຈິ່ງຈຳເປັນຕ້ອງສະເດັດມາໂດຍແຕ່ງກາຍ ແລະ ຕົບແຕ່ງຄືກັບຊາວຢິວໃນຍຸກຫຼາຍພັນປີກ່ອນ? ຮູບຮ່າງທີ່ພຣະເຈົ້າຮັບເອົາໃນເນື້ອໜັງແມ່ນສາມາດຂັດຂວາງພາລະກິດຂອງພຣະເຈົ້າບໍ? ນີ້ແມ່ນທິດສະດີຂອງໃຜ? ໃນເວລາທີ່ພຣະເຈົ້າປະຕິບັດພາລະກິດ ເປັນຫຍັງຈິ່ງຕ້ອງເປັນໄປຕາມຈິນຕະນາການຂອງມະນຸດ? ສິ່ງດຽວທີ່ພຣະເຈົ້າສຸມໃສ່ໃນພາລະກິດຂອງພຣະອົງ ແມ່ນເພື່ອໃຫ້ພາລະກິດມີຜົນ. ພຣະອົງບໍ່ໄດ້ປະຕິບັດຕາມກົດເກນ ແລະ ບໍ່ມີກົດລະບຽບຕໍ່ພາລະກິດຂອງພຣະອົງ ແລ້ວມະນຸດຈະສາມາດເຂົ້າໃຈພາລະກິດໄດ້ແນວໃດ? ມະນຸດຈະສາມາດເບິ່ງເຫັນພາລະກິດຂອງພຣະເຈົ້າຢ່າງລະອຽດໂດຍອາໄສແນວຄວາມຄິດ ແລະ ຈິນຕະນາການຂອງເຂົາໄດ້ແນວໃດ? ສະນັ້ນ ພວກເຈົ້າຄວນມີຈຸດໝຸ້ງໝັ້ນທີ່ຖືກຕ້ອງ: ຈົ່ງຢ່າກັງວົນກັບເລື່ອງທີ່ບໍ່ສຳຄັນ ແລະ ຈົ່ງຢ່າສ້າງເລື່ອງຕ່າງໆທີ່ໃໝ່ຕໍ່ພວກເຈົ້າໃຫ້ເປັນເລື່ອງໃຫຍ່ ເຊິ່ງນີ້ຈະເຮັດໃຫ້ເຈົ້າເຊົາເປັນຕົວຕະຫຼົກ ແລະ ເຮັດໃຫ້ຜູ້ຄົນຫົວຂວັນເຈົ້າ. ເຈົ້າໄດ້ເຊື່ອໃນພຣະເຈົ້າເປັນເວລາຫຼາຍປີ ແຕ່ເຈົ້າກໍຍັງບໍ່ຮູ້ຈັກພຣະເຈົ້າ. ໃນທີ່ສຸດແລ້ວ ເຈົ້າຈະຕົກຢູ່ໃນການຂ້ຽນຕີ ແລະ ເຈົ້າຜູ້ທີ່ຖືກຈັດ “ຢູ່ໃນອັນດັບໜຶ່ງ

ຂອງຫ້ອງຮຽນ"[9] ແມ່ນຖືກຈັດຢູ່ໃນລະດັບຂອງຜູ້ທີ່ຖືກຂ້ຽນຕີ. ເຈົ້າບໍ່ຄວນໃຊ້ວິທີການທີ່ສະຫຼາດເພື່ອສະແດງກົນອຸບາຍເລັກນ້ອຍຂອງເຈົ້າ; ສາຍຕາສັ້ນຂອງເຈົ້າຈະສາມາດແນມເຫັນພຣະເຈົ້າຜູ້ທີ່ເຫັນແຈ້ງຈາກນິລັນເຖິງນິລັນດອນໄດ້ຢ່າງແທ້ຈິງໄດ້ບໍ? ປະສົບການແບບຜິວເຜີນຂອງເຈົ້າຈະເຮັດໃຫ້ເຈົ້າເບິ່ງຄວາມປະສົງຂອງພຣະເຈົ້າອອກຢ່າງຄົບຖ້ວນໄດ້ບໍ? ຈົ່ງຢ່າອວດດີ. ແທ້ຈິງແລ້ວ ພຣະເຈົ້າບໍ່ແມ່ນຂອງໂລກນີ້ ສະນັ້ນ ພາລະກິດຂອງພຣະອົງຈະສາມາດເປັນໄປຕາມທີ່ເຈົ້າຄາດຫວັງໄວ້ໄດ້ແນວໃດ?

9 "ຢູ່ໃນອັນດັບໜຶ່ງຂອງຫ້ອງຮຽນ" ແມ່ນຖືກໃຊ້ເພື່ອເຍາະເຍີ້ຍຄົນທີ່ສະແຫວງຫາພຣະເຈົ້າຢ່າງກະຕືລືລົ້ນ.

# ພາລະກິດ ແລະ ທາງເຂົ້າ (9)

ປະເພນີຂອງຊົນເຜົ່າທີ່ຝັງແໜ້ນ ແລະ ທັດສະນະທາງດ້ານຈິດໃຈ ແມ່ນໄດ້ປົກຄຸມຈິດໃຈຂອງມະນຸດທີ່ບໍລິສຸດ ແລະ ຄືເດັກນ້ອຍ ແລະ ສິ່ງເຫຼົ່ານັ້ນໄດ້ໂຈມຕີຈິດໃຈຂອງມະນຸດ ໂດຍບໍ່ມີຄວາມເປັນມະນຸດແມ່ນແຕ່ໜ້ອຍ ຄືກັບວ່າ ບໍ່ມີສະຕິ ຫຼື ຄວາມຮູ້ສຶກກ່ຽວກັບຕົວເອງ. ວິທີການທີ່ພວກຜີສາດເຫຼົ່ານີ້ແມ່ນໂຫດຮ້າຍທີ່ສຸດ ແລະ ມັນຄືກັບວ່າ "ການສຶກສາ" ແລະ "ການລໍ້ລ້ຽງ" ໄດ້ກາຍເປັນວິທີການທີ່ເກົ່າແກ່ ທີ່ກະສັດຂອງພວກມານຮ້າຍໃຊ້ຂ້າມະນຸດ. ມັນປົກປິດຈິດໃຈທີ່ຊົ່ວຮ້າຍຂອງມັນ ໂດຍນໍາໃຊ້ "ຄໍາສັ່ງສອນທີ່ເລິກເຊິ່ງ" ຂອງມັນ, ແຕ່ງກາຍໃນເຄື່ອງນຸ່ງຫົ່ມຂອງແກະ ເພື່ອໄດ້ຮັບຄວາມໄວ້ວາງໃຈຈາກມະນຸດ ແລ້ວກໍຄວ້າເອົາໂອກາດໃນເວລາທີ່ມະນຸດນອນຫຼັບໃນຄວາມບໍ່ມີເຫື່ອບໍ່ມີແຮງເພື່ອກິນເຂົາທັງໝົດ. ມະນຸດຊາດທີ່ໜ້າສັງເວດເອີຍ. ພວກເຂົາຈະສາມາດຮູ້ໄດ້ແນວໃດວ່າ ດິນແດນທີ່ພວກເຂົາຖືກລ້ຽງແມ່ນດິນແດນຂອງມານຮ້າຍ ເຊິ່ງຜູ້ທີ່ລ້ຽງພວກເຂົາ ທີ່ຈິງແລ້ວກໍແມ່ນສັດຕູທີ່ເຮັດໃຫ້ພວກເຂົາເຈັບປວດ. ແຕ່ມະນຸດກໍຍັງບໍ່ຕື່ນເທື່ອ; ເມື່ອໄດ້ເຮັດໃຫ້ຄວາມຫິວ ແລະ ຄວາມກະຫາຍຂອງພວກເຂົາອີ່ມຈົນພໍໃຈ ເຂົາກໍກຽມຕອບແທນ "ຄວາມເມດຕາ" ຂອງ "ພໍ່ແມ່" ຂອງເຂົາຕໍ່ການລ້ຽງດູເຂົາ. ມະນຸດແມ່ນເປັນແນວນັ້ນ. ໃນປັດຈຸບັນ ເຂົາຍັງບໍ່ຮູ້ວ່າ ກະສັດທີ່ລ້ຽງເຂົາແມ່ນສັດຕູຂອງເຂົາ. ແຜ່ນດິນໂລກແມ່ນເຕັມໄປດ້ວຍກະດູກຂອງຄົນຕາຍ, ມານຮ້າຍແມ່ນມ່ວນຊື່ນຢ່າງບ້າປ່ວງໂດຍທີ່ບໍ່ຢຸດເຊົາ ແລະ ສືບຕໍ່ກິນເນື້ອໜັງຂອງມະນຸດໃນ "ໂລກນະຣົກ" ໂດຍທີ່ແບ່ງປັນຂຸມຝັງສົບກັບກະດູກມະນຸດ ແລະ ພະຍາຍາມຢ່າງໄຮ້ປະໂຫຍດ ເພື່ອກືນກິນເສດສ່ວນສຸດທ້າຍຂອງຮ່າງກາຍມະນຸດທີ່ຈີກຂາດໄປແລ້ວ. ແຕ່ມະນຸດກໍຍັງໂງ່ຈ້າ ແລະ ບໍ່ເຄີຍປະຕິບັດກັບມານຮ້າຍເປັນຄືກັບສັດຕູຂອງເຂົາ ແຕ່ກົງກັນຂ້າມ ພັດຮັບໃຊ້ມັນຢ່າງໝົດໃຈຂອງເຂົາ. ຜູ້ຄົນທີ່ຊົ່ວຊ້າແບບນີ້ແມ່ນບໍ່ສາມາດຮູ້ຈັກພຣະເຈົ້າໄດ້ຢ່າງແທ້ຈິງ. ມັນງ່າຍບໍ ທີ່ຈະໃຫ້ພຣະເຈົ້າກາຍເປັນເນື້ອໜັງ ແລະ ມາຢູ່ທ່າມກາງພວກເຂົາໂດຍປະຕິບັດພາລະກິດແຫ່ງຄວາມລອດພົ້ນທັງໝົດຂອງພຣະອົງ? ມະນຸດທີ່ໄດ້ຕົກໄປຢູ່ໃນແດນມໍລະນາຈະສາມາດເຮັດໃຫ້ຄວາມຕ້ອງການຂອງພຣະເຈົ້າເປັນທີ່ໜ້າພໍໃຈໄດ້ແນວໃດ? ພຣະເຈົ້າຕ້ອງອົດທົນຕໍ່ຫຼາຍໆຄໍ່າຄືນທີ່ອົດຫຼັບອົດນອນ ເພື່ອພາລະກິດຂອງມະນຸດຊາດ. ຈາກຈຸດສູງຫາຈຸດຕໍ່າສຸດ, ພຣະອົງໄດ້ສະເດັດລົງມາສູ່ນະຮົກເທິງດິນທີ່ມະນຸດອາໄສຢູ່ ເພື່ອໃຊ້ເວລາຂອງພຣະອົງຢູ່ກັບມະນຸດ ໂດຍທີ່ພຣະອົງບໍ່ເຄີຍຈົ່ມກ່ຽວກັບຄວາມຊົ່ວຊ້າໃນທ່າມກາງມະນຸດ ແລະ ພຣະອົງບໍ່ເຄີຍຕໍານິຕິເຕືອນມະນຸດຍ້ອນຄວາມບໍ່ເຊື່ອຟັງຂອງເຂົາ ແຕ່ໄດ້ອົດທົນຕໍ່ຄວາມອັບອາຍທີ່ສຸດ ໃນຂະນະທີ່ພຣະອົງປະຕິບັດພາລະກິດຂອງພຣະອົງດ້ວຍຕົວເອງ. ພຣະເຈົ້າຈະເປັນຂອງນະຮົກໄດ້ແນວໃດ? ພຣະອົງຈະສາມາດໃຊ້ຊີວິດຂອງພຣະອົງຢູ່ນະຮົກໄດ້ແນວໃດ? ແຕ່ເພື່ອເຫັນແກ່ມະນຸດຊາດທັງໝົດ ເພື່ອວ່າ ມະນຸດຊາດທັງມວນຈະສາມາດຊອກຫາຄວາມສະຫງົບໃຫ້ໄວຂຶ້ນ, ພຣະອົງຈຶ່ງໄດ້ອົດທົນຕໍ່ຄວາມອັບອາຍ ແລະ ໄດ້ທົນທຸກຕໍ່ຄວາມບໍ່ຍຸຕິທໍາໃນການສະເດັດມາແຜ່ນດິນໂລກ ແລະ ໄດ້ເຂົ້າໄປໃນ "ນະຮົກ" ແລະ "ແດນມໍລະນາ" ດ້ວຍຕົວພຣະອົງເອງ ແລະ ໄດ້ເຂົ້າໄປໃນຖໍ້າເສືອ ເພື່ອຊ່ວຍມະນຸດໃຫ້ພົ້ນ. ແລ້ວ

ມະນຸດມີຄຸນສົມບັດຕໍ່ຕ້ານພຣະເຈົ້າໄດ້ແນວໃດ? ເຂົາມີເຫດຜົນຫຍັງ ທີ່ຈະຈົ່ມວ່າກ່ຽວກັບພຣະເຈົ້າ? ເຂົາສາມາດກ້າທີ່ຈະເບິ່ງພຣະເຈົ້າໄດ້ແນວໃດ? ພຣະເຈົ້າແຫ່ງສະຫວັນໄດ້ສະເດັດມາດິນແດນແຫ່ງຄວາມຊົ່ວຮ້າຍທີ່ສົກກະປົກທີ່ສຸດແຫ່ງນີ້ ແລະ ບໍ່ເຄີຍລະບາຍຄວາມບໍ່ພໍໃຈຂອງພຣະອົງ ຫຼື ຈົ່ມວ່າກ່ຽວກັບມະນຸດເລີຍ ແຕ່ກົງກັນຂ້າມ ພັດຍອມຮັບເອົາການທຳລາຍລ້າງ[1] ແລະ ການກົດຂີ່ຂອງມະນຸດຢ່າງງຽບໆ. ພຣະອົງບໍ່ເຄີຍທີ່ຈະຕອບໂຕ້ຄວາມຮຽກຮ້ອງຕ້ອງການທີ່ບໍ່ສົມເຫດສົມຜົນຂອງມະນຸດ, ພຣະອົງບໍ່ເຄີຍຮຽກຮ້ອງຈາກມະນຸດຫຼາຍເກີນໄປ ແລະ ພຣະອົງບໍ່ເຄີຍຮຽກຮ້ອງຈາກມະນຸດຢ່າງບໍ່ສົມເຫດສົມຜົນ; ພຣະອົງພຽງແຕ່ປະຕິບັດພາລະກິດທັງໝົດທີ່ມະນຸດຕ້ອງການໂດຍບໍ່ມີການຈົ່ມວ່າ: ການສັ່ງສອນ, ການໃຫ້ແສງສະຫວ່າງ, ການຕຳນິຕິເຕືອນ, ການເຮັດໃຫ້ພຣະທຳບໍລິສຸດ, ການກ່າວເຕືອນ, ການແນະນຳ, ການປອບໃຈ, ການຕັດສິນ ແລະ ການເປີດເຜີຍ. ມີບາດກ້າວໃດແດ່ຂອງພຣະອົງທີ່ບໍ່ໄດ້ເຮັດເພື່ອຊີວິດຂອງມະນຸດ? ເຖິງວ່າ ພຣະອົງຈະໄດ້ກຳຈັດໂອກາດ ແລະ ຊາຕາກຳຂອງມະນຸດ ແຕ່ມີບາດກ້າວໃດແດ່ທີ່ພຣະເຈົ້າປະຕິບັດ ບໍ່ແມ່ນເພື່ອຊາຕາກຳຂອງມະນຸດ? ມີສິ່ງໃດໃນບັນດາສິ່ງເຫຼົ່ານັ້ນ ທີ່ບໍ່ໄດ້ເພື່ອການຢູ່ລອດຂອງມະນຸດ? ມີສິ່ງໃດໃນບັນດາສິ່ງເຫຼົ່ານັ້ນ ທີ່ບໍ່ໄດ້ເພື່ອການປົດປ່ອຍມະນຸດຈາກຄວາມທຸກທໍລະມານນີ້ ແລະ ຈາກການກົດຂີ່ຂອງອຳນາດມືດ ທີ່ມືດດຳຄືກັບກາງຄືນ? ມີສິ່ງໃດໃນບັນດາສິ່ງເຫຼົ່ານັ້ນ ທີ່ບໍ່ແມ່ນເພື່ອມະນຸດ? ໃຜສາມາດເຂົ້າໃຈຫົວໃຈຂອງພຣະເຈົ້າເຊິ່ງຄືກັນກັບຫົວໃຈຂອງມານດາທີ່ຮັກແພງ? ໃຜສາມາດເຂົ້າໃຈຫົວໃຈທີ່ກະຕືລືລົ້ນຂອງພຣະເຈົ້າ? ໃຈທີ່ເຕັມໄປດ້ວຍຄວາມຈິງໃຈ ແລະ ຄວາມຄາດຫວັງອັນແຮງກ້າຂອງພຣະເຈົ້າ ແມ່ນຖືກຕອບແທນດ້ວຍຈິດໃຈທີ່ເຢັນຊາ, ຄວາມກະດ້າງ, ສາຍຕາທີ່ເມີນເສີຍ ແລະ ດ້ວຍການຕຳນິ ແລະ ການດູຖູກຊໍ້າແລ້ວຊໍ້າອີກຂອງມະນຸດ; ສິ່ງເຫຼົ່ານັ້ນແມ່ນຖືກຕອບແທນດ້ວຍຄຳເວົ້າທີ່ບາດໃຈ, ແດກດັນ ແລະ ການດູຖູກ; ສິ່ງເຫຼົ່ານັ້ນແມ່ນຖືກຕອບແທນດ້ວຍການເຍາະເຍີ້ຍຂອງມະນຸດ, ການຢຽບຢໍ່າ ແລະ ການປະຕິເສດຂອງເຂົາ, ດ້ວຍການເຂົ້າໃຈຜິດຂອງເຂົາ, ການຈົ່ມວ່າ, ການແບ່ງແຍກ ແລະ ການຫຼີກເວັ້ນ ແລະ ໂດຍທີ່ບໍ່ມີຫຍັງ ນອກຈາກຄວາມຫຼອກລວງ, ການໂຈມຕີ ແລະ ຄວາມຂົມຂື່ນ. ພຣະທຳທີ່ອົບອຸ່ນໄດ້ຮັບການຍົກຄິ້ວໃສ່ແບບດຸຮ້າຍ ແລະ ການຄັດຄ້ານຢ່າງເຢັນຊາຂອງນິ້ວມືພັນນິ້ວທີ່ແກວ່ງໄປມາ. ພຣະເຈົ້າສາມາດອົດທົນ, ກົ້ມຫົວ ແລະ ຮັບໃຊ້ຜູ້ຄົນຄືກັນກັບງົວທີ່ເຕັມໃຈ[2]. ມີຕາເວັນ ແລະ ເດືອນຫຼາຍດວງ, ມີຫຼາຍຄັ້ງທີ່ພຣະອົງໄດ້ຜະເຊີນກັບດວງດາວ, ມີຫຼາຍຄັ້ງເທື່ອທີ່ພຣະອົງໄດ້ໜີໄປໃນຍາມຕາເວັນຂຶ້ນ ແລະ ກັບຄືນມາໃນເວລາຕາເວັນຕົກ, ແກວ່ງໄປມາ ແລະ ປິ້ນຂຶ້ນລົງ, ທົນທຸກກັບຄວາມທໍລະມານ ທີ່ມີຫຼາຍກວ່າຄວາມເຈັບປວດຈາກການທີ່ພຣະອົງໜີອອກຈາກພຣະບິດາຂອງ

1 "ການທຳລາຍລ້າງ" ແມ່ນຖືກໃຊ້ເພື່ອເປີດເຜີຍຄວາມບໍ່ເຊື່ອຟັງຂອງມະນຸດຊາດ.

2 "ໄດ້ຮັບການຍົກຄິ້ວໃສ່ແບບດຸຮ້າຍ ແລະ ການຄັດຄ້ານຢ່າງເຢັນຊາຂອງນິ້ວມືພັນນິ້ວທີ່ແກວ່ງໄປມາ, ກົ້ມຫົວ ແລະ ຮັບໃຊ້ຜູ້ຄົນຄືກັນກັບງົວທີ່ເຕັມໃຈ" ແມ່ນປະໂຫຍກດຽວແຕ່ຕົ້ນ ແຕ່ຢູ່ໃນນີ້ແມ່ນຖືກແຍກອອກເປັນສອງ ເພື່ອເຮັດໃຫ້ສິ່ງຕ່າງໆມີຄວາມຊັດເຈນ. ພາກທີໜຶ່ງຂອງປະໂຫຍກໝາຍເຖິງການກະທຳຂອງມະນຸດ ໃນຂະນະປະໂຫຍກທີສອງບົ່ງບອກເຖິງການທົນທຸກທີ່ພຣະເຈົ້າປະສົບ ແລະ ພຣະເຈົ້າແມ່ນອ່ອນນ້ອມ ແລະ ລີ້ລັບ.

ພຣະອົງຫຼາຍພັນຄັ້ງ, ອົດທົນຕໍ່ການໂຈມຕີ ແລະ ການທຳລາຍຂອງມະນຸດ ແລະ ການຈັດການ ແລະ ການລົບຮານຂອງມະນຸດ. ຄວາມຖ່ອມຕົວ ແລະ ຄວາມລີ້ລັບຂອງພຣະເຈົ້າ ແມ່ນໄດ້ຮັບການຕອບແທນດ້ວຍອະຄະຕິ[3] ຂອງມະນຸດ, ດ້ວຍທັດສະນະ ແລະ ການປະຕິບັດຕໍ່ທີ່ບໍ່ຍຸຕິທຳຂອງມະນຸດທີ່ບໍ່ຍຸຕິທຳ ແລະ ວິທີທີ່ພຣະເຈົ້າປະຕິບັດພາລະກິດໃນຄວາມບໍ່ແຈ່ມແຈ້ງຢ່າງງຽບໆ, ຄວາມອົດກັ້ນຂອງພຣະອົງ ແລະ ຄວາມອົດທົນຂອງພຣະອົງ ແມ່ນໄດ້ຮັບການຕອບແທນດ້ວຍສາຍຕາຈ້ອງເບິ່ງຢ່າງໂລບມາກໂລພາຂອງມະນຸດ; ມະນຸດພະຍາຍາມຢຽບຢໍ່າພຣະເຈົ້າໃຫ້ຕາຍ ໂດຍທີ່ບໍ່ມີຄວາມເສຍໃຈ ແລະ ພະຍາຍາມຢຽບຢໍ່າພຣະເຈົ້າເຂົ້າໄປໃນພື້ນດິນ. ທັດສະນະຄະຕິຂອງມະນຸດໃນການປະຕິບັດຂອງເຂົາທີ່ມີຕໍ່ພຣະເຈົ້າ ແມ່ນສິ່ງໜຶ່ງຂອງ "ຄວາມສະຫຼາດທີ່ຫາຍາກ" ແລະ ພຣະເຈົ້າທີ່ຖືກຂົ່ມເຫັງ ແລະ ດູຖູກໂດຍມະນຸດ ແມ່ນຖືກໜີບຈົນແປຢູ່ກ້ອງຕີນຂອງຜູ້ຄົນຫຼາຍສິບພັນຄົນ ໃນຂະນະທີ່ມະນຸດເອງຢືນຢູ່ຈຸດທີ່ສູງ ຄືກັບວ່າ ເຂົາຈະເປັນກະສັດແຫ່ງເນີນພູ, ຄືກັບວ່າ ເຂົາຕ້ອງການເອົາອຳນາດຢ່າງສົມບູນ[4] ເພື່ອຖືອຳນາດຕຸລາການຢູ່ເບື້ອງຫຼັງໜ້າຈໍ, ເພື່ອເຮັດໃຫ້ພຣະເຈົ້າເປັນຜູ້ກຳກັບຢ່າງຕັ້ງໃຈ ແລະ ເຮັດຕາມກົດເກນຢູ່ເບື້ອງຫຼັງສາກ ເຊິ່ງເປັນຜູ້ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຕອບໂຕ້ ຫຼື ສ້າງຄວາມວຸ້ນວາຍ; ພຣະເຈົ້າຕ້ອງຫຼິ້ນບົດບາດຂອງຈັກກະພັດອົງສຸດທ້າຍ, ພຣະອົງຕ້ອງເປັນຫຸ່ນເຊີດ[5] ທີ່ປາສະຈາກອິດສະຫຼະເສລີທັງມວນ. ການກະທຳຂອງມະນຸດແມ່ນບໍ່ສາມາດເວົ້າໄດ້ ແລ້ວເຂົາຈະມີຄຸນສົມບັດຮຽກຮ້ອງສິ່ງນີ້ ຫຼື ສິ່ງນັ້ນຈາກພຣະເຈົ້າໄດ້ແນວໃດ? ເຂົາຈະມີຄຸນສົມບັດໃຫ້ຄຳສະເໜີແນະແກ່ພຣະເຈົ້າໄດ້ແນວໃດ? ເຂົາຈະມີຄຸນສົມບັດຮຽກຮ້ອງໃຫ້ພຣະເຈົ້າເຫັນອົກເຫັນໃຈກັບຄວາມອ່ອນແອຂອງເຂົາໄດ້ແນວໃດ? ເຂົາຄູ່ຄວນທີ່ຈະໄດ້ຮັບຄວາມເມດຕາຈາກພຣະເຈົ້າໄດ້ແນວໃດ? ເຂົາຄູ່ຄວນທີ່ຈະໄດ້ຮັບຄວາມເອື້ອເຟື້ອເພື່ອແຜ່ຈາກພຣະເຈົ້າຊໍ້າແລ້ວຊໍ້າອີກໄດ້ແນວໃດ? ເຂົາຄູ່ຄວນທີ່ຈະໄດ້ຮັບການໃຫ້ອະໄພຈາກພຣະເຈົ້າຊໍ້າແລ້ວຊໍ້າອີກໄດ້ແນວໃດ? ສາມັນສຳນຶກຂອງເຂົາຢູ່ໃສ? ເຂົາເຮັດໃຫ້ຫົວໃຈຂອງພຣະເຈົ້າແຕກສະຫຼາຍແຕ່ດົນນານ ແລະ ເຂົາໄດ້ປະຖິ້ມໃຫ້ຫົວໃຈຂອງພຣະເຈົ້າແຕກເປັນຊິ້ນໆແຕ່ດົນນານແລ້ວ. ພຣະເຈົ້າໄດ້ສະເດັດມາຢູ່ທ່າມກາງມະນຸດດ້ວຍຄວາມກະຕືລືລົ້ນ ໂດຍຫວັງວ່າ ມະນຸດຈະມີຄວາມໃຈບຸນຕໍ່ພຣະອົງ ເຖິງແມ່ນຈະເປັນຄວາມອົບອຸ່ນເລັກນ້ອຍກໍຍັງດີ. ແຕ່ໃຈຂອງພຣະເຈົ້າແມ່ນໄດ້ຮັບການປອບໃຈຈາກມະນຸດຊ້າຫຼາຍ ແລະ ສິ່ງດຽວທີ່ພຣະອົງໄດ້ຮັບກໍຄືການໂຈມຕີໂດຍການແກວ່ງກ້ອນຫີມະ[6] ແລະ ການທໍລະມານ. ໃຈຂອງມະນຸດແມ່ນໂລບມາກໂລພາ, ຄວາມປາດຖະໜາຂອງເຂົາແມ່ນມີຫຼາຍ, ເຂົາບໍ່ເຄີຍພໍໃຈ, ເຂົາເປັນໂຕອັນຕະລາຍ ແລະ ບ້າປ່ວງ, ເຂົາບໍ່ເຄີຍຍອມໃຫ້ພຣະເຈົ້າມີອິດສະຫຼະ ຫຼື ສິດໃນການເວົ້າ ແລະ ປະໃຫ້ພຣະເຈົ້າບໍ່ມີ

---

3 "ອະຄະຕິ" ໝາຍເຖິງພຶດຕິກຳທີ່ບໍ່ເຊື່ອຟັງຂອງຜູ້ຄົນ.

4 "ເອົາອຳນາດຢ່າງສົມບູນ" ໝາຍເຖິງພຶດຕິກຳທີ່ບໍ່ເຊື່ອຟັງຂອງຜູ້ຄົນ. ພວກເຂົາຍົກສູງຕົວເອງ, ລ່າມໂສ້ຜູ້ອື່ນ, ເຮັດໃຫ້ຜູ້ອື່ນຕິດຕາມພວກເຂົາ ແລະ ທົນທຸກເພື່ອພວກເຂົາ. ພວກເຂົາແມ່ນອຳນາດ ທີ່ເປັນສັດຕູກັບພຣະເຈົ້າ.

5 "ຫຸ່ນເຊີດ" ແມ່ນຖືກໃຊ້ເພື່ອເຍາະເຍີ້ຍຜູ້ທີ່ບໍ່ຮູ້ຈັກພຣະເຈົ້າ.

6 "ແກວ່ງກ້ອນຫີມະ" ແມ່ນຖືກໃຊ້ເພື່ອບົ່ງບອກເຖິງພຶດຕິກຳທີ່ຕໍ່າຕ້ອຍຂອງຜູ້ຄົນ.

ທາງເລືອກ ນອກຈາກຍອມຮັບຄວາມອັບອາຍ ແລະ ຍອມໃຫ້ມະນຸດຄວບຄຸມພຣະອົງຕາມທີ່ເຂົາປາດຖະໜາ.

ຈາກການຊົງສ້າງຈົນຮອດປັດຈຸບັນ ພຣະເຈົ້າໄດ້ອົດທົນຕໍ່ຄວາມເຈັບປວດຢ່າງຫຼວງຫຼາຍ ແລະ ໄດ້ທົນທຸກຕໍ່ການໂຈມຕີຢ່າງມະຫາສານ. ເຖິງຢ່າງໃດກໍຕາມ ແມ່ນແຕ່ໃນປັດຈຸບັນ ມະນຸດກໍຍັງບໍ່ຫຼຸດຜ່ອນຄວາມຮຽກຮ້ອງຕ້ອງການຂອງເຂົາທີ່ມີຕໍ່ພຣະເຈົ້າ, ເຂົາຍັງກວດສອບພຣະເຈົ້າຢ່າງຖີ່ຖ້ວນ, ເຂົາຍັງບໍ່ມີຄວາມອົດທົນຕໍ່ພຣະອົງ ແລະ ບໍ່ເຮັດຫຍັງ ນອກຈາກໃຫ້ຄຳແນະນຳແກ່ພຣະອົງ ແລະ ວິພາກວິຈານພຣະອົງ ແລະ ລົງວິໄນພຣະອົງ ຄືກັບວ່າ ມີຄວາມຢ້ານກວ່າຢູ່ເລິກໆວ່າ ພຣະເຈົ້າຈະເລືອກເສັ້ນທາງທີ່ຜິດ, ວ່າພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກແມ່ນໂຫດຮ້າຍ ແລະ ບໍ່ສົມເຫດສົມຜົນ ຫຼື ສ້າງຄວາມບໍ່ສະຫງົບ ຫຼື ພຣະອົງຈະບໍ່ມີຜົນລວມຫຍັງ. ມະນຸດມີທັດສະນະຄະຕິແບບນີ້ຕໍ່ພຣະເຈົ້າສະເໝີ. ແລ້ວມັນຈະບໍ່ເຮັດໃຫ້ພຣະເຈົ້າເສຍໃຈໄດ້ແນວໃດ? ໃນການກາຍເປັນເນື້ອໜັງ, ພຣະເຈົ້າໄດ້ອົດທົນຕໍ່ຄວາມເຈັບປວດ ແລະ ຄວາມອັບອາຍຢ່າງມະຫາສານ; ແລ້ວມັນຕ້ອງຮ້າຍແຮງສໍ່າໃດ ເພື່ອເຮັດໃຫ້ພຣະເຈົ້າຍອມຮັບເອົາຄຳສັ່ງສອນຂອງມະນຸດ? ການສະເດັດມາຮອດຂອງພຣະອົງໃນທ່າມກາງມະນຸດ ແມ່ນໄດ້ຍາດເອົາຄວາມອິດສະຫຼະທັງໝົດອອກຈາກພຣະອົງ ຄືກັບວ່າ ພຣະອົງຖືກກັກຂັງໃນແດນມໍລະນາ ແລະ ພຣະອົງໄດ້ຍອມໃຫ້ມະນຸດວິເຄາະ ໂດຍບໍ່ຂັດຂືນແມ່ນແຕ່ໜ້ອຍດຽວ. ສິ່ງນີ້ບໍ່ເປັນຕາອັບອາຍບໍ? ໃນການສະເດັດມາຢູ່ໃນທ່າມກາງຄອບຄົວຂອງມະນຸດທຳມະດາ, "ພຣະເຢຊູ" ໄດ້ທົນທຸກຕໍ່ຄວາມບໍ່ຍຸຕິທຳຢ່າງຫຼວງຫຼາຍທີ່ສຸດ. ຍິ່ງອັບອາຍໄປຫຼາຍກວ່ານັ້ນ ແມ່ນພຣະອົງຕ້ອງໄດ້ສະເດັດມາສູ່ໂລກແຫ່ງຂີ້ຝຸ່ນນີ້ ແລະ ຕ້ອງໄດ້ຖ່ອມຕົວເອງໃຫ້ໄປຢູ່ໃນຈຸດທີ່ຕໍ່າຕ້ອຍທີ່ສຸດ ແລະ ຮັບເອົາເນື້ອໜັງຂອງຄົນທຳມະດາສາມັນທີ່ສຸດ. ພຣະເຈົ້າທີ່ສູງສົ່ງທີ່ສຸດແມ່ນບໍ່ຕ້ອງທົນທຸກຕໍ່ຄວາມລຳບາກບໍ ໃນການກາຍເປັນມະນຸດທີ່ທຸກຍາກ? ສິ່ງນີ້ບໍ່ແມ່ນເພື່ອມະນຸກຊາດທັງໝົດບໍ? ເຄີຍມີເວລາໃດບໍ ທີ່ພຣະອົງຄິດເພື່ອຕົວພຣະອົງເອງ? ພາຍຫຼັງທີ່ພຣະອົງຖືກປະຕິເສດ ແລະ ຖືກຂ້າຕາຍໂດຍຊາວຢິວ ແລະ ຖືກຫົວຂວັນ ແລະ ເຍາະເຍີ້ຍໂດຍຜູ້ຄົນ, ພຣະອົງກໍບໍ່ເຄີຍຕໍ່ວ່າສະຫວັນ ຫຼື ປະທ້ວງແຜ່ນດິນໂລກ. ໃນປັດຈຸບັນ ເຫດການທີ່ເສົ້າສະຫຼົດແຫ່ງພັນປີນີ້ ໄດ້ປາກົດຂຶ້ນອີກຄັ້ງໃນທ່າມກາງຜູ້ຄົນທີ່ຄ້າຍຄືກັບຊາວຢິວ. ພວກເຂົາບໍ່ໄດ້ເຮັດບາບຄືກັນບໍ? ສິ່ງໃດທີ່ເຮັດໃຫ້ມະນຸດມີຄຸນສົມບັດໄດ້ຮັບຄຳໝັ້ນສັນຍາຈາກພຣະເຈົ້າ? ເຂົາບໍ່ແມ່ນຕໍ່ຕ້ານພຣະເຈົ້າ ແລ້ວຫຼັງຈາກນັ້ນກໍຍອມຮັບເອົາພອນຂອງພຣະອົງບໍ? ເປັນຫຍັງມະນຸດຈຶ່ງບໍ່ເຄີຍຜະເຊີນກັບຄວາມຍຸຕິທຳ ຫຼື ຊອກຫາຄວາມຈິງ? ເປັນຫຍັງເຂົາຈຶ່ງບໍ່ເຄີຍສົນໃຈໃນສິ່ງພຣະເຈົ້າເຮັດ? ຄວາມຊອບທຳຂອງເຂົາຢູ່ໃສ? ຄວາມຍຸຕິທຳຂອງເຂົາຢູ່ໃສ? ເຂົາກ້າທີ່ຈະຕາງໜ້າໃຫ້ພຣະເຈົ້າບໍ? ຄວາມສຳນຶກແຫ່ງຄວາມຍຸຕິທຳຂອງເຂົາຢູ່ໃສ? ສິ່ງທີ່ເປັນທີ່ຮັກຂອງມະນຸດແມ່ນເປັນທີ່ຮັກຂອງພຣະເຈົ້າຫຼາຍສໍ່າໃດ? ມະນຸດບໍ່ສາມາດບອກເຖິງຄວາມແຕກຕ່າງລະຫວ່າງສໍຂາວ ແລະ ເນີຍ[7],

7 "ບໍ່ສາມາດບອກເຖິງຄວາມແຕກຕ່າງລະຫວ່າງສໍຂາວ ແລະ ເນີຍ" ໝາຍເຖິງ ເມື່ອຜູ້ຄົນບິດເບືອນຄວາມປະສົງຂອງພຣະເຈົ້າໃຫ້ເປັນສິ່ງທີ່ຄ້າຍຄືກັບຊາຕານ, ຄວາມໝາຍລວມກໍຄື ພຶດຕິກຳທີ່ຜູ້ຄົນປະຕິເສດພຣະເຈົ້າ.

ເຂົາສັບສົນລະຫວ່າງດຳ ແລະ ຂາວ[8] ສະເໝີ, ເຂົາຢຸດຄວາມຍຸຕິທຳ ແລະ ຄວາມຈິງ ແລະ ຍົກຄວາມບໍ່ຍຸຕິທຳ ແລະ ຄວາມບໍ່ຊອບທຳໃຫ້ຢູ່ເທິງອາກາດ. ເຂົາຂັບໄລ່ແສງສະຫວ່າງ ແລະ ກະໂດດໄປມາໃນທ່າມກາງຄວາມມືດ. ຜູ້ທີ່ສະແຫວງຫາຄວາມຈິງ ແລະ ຄວາມຍຸຕິທຳ ແມ່ນໄດ້ໄລ່ແສງສະຫວ່າງໜີແທນ, ຜູ້ທີ່ສະແຫວງຫາພຣະເຈົ້າ ແມ່ນໄດ້ຢຽບຢ່ຳພຣະອົງຢູ່ກ້ອງຕີນຂອງພວກເຂົາ ແລະ ຍົກຕົວເອງຂຶ້ນສູ່ເທິງຟ້າ. ມະນຸດແມ່ນບໍ່ແຕກຕ່າງຈາກໂຈນ[9]. ເຫດຜົນຂອງເຂົາຢູ່ໃສ? ມີໃຜແນ່ທີ່ສາມາດບອກໄດ້ວ່າ ຖືກ ຫຼື ຜິດ? ມີໃຜແນ່ທີ່ສາມາດຍົກສູງຄວາມຍຸຕິທຳ? ມີໃຜແນ່ທີ່ເຕັມໃຈທີ່ຈະທົນທຸກເພື່ອຄວາມຈິງ? ຜູ້ຄົນແມ່ນໂຫດຮ້າຍ ແລະ ຊົ່ວຮ້າຍ! ເມື່ອໄດ້ຕອກພຣະເຈົ້າໃສ່ໄມ້ກາງແຂນ ພວກເຂົາກໍຕົບມື ແລະ ຮ້ອງໂຮ ຢ່າງປ່າເຖື່ອນໂດຍບໍ່ຢຸດຢັ້ງ. ພວກເຂົາຄືໂຕໄກ່ ແລະ ໂຕໝາ, ພວກເຂົາສົມຮູ້ຮ່ວມຄິດ ແລະ ເປັນໃຈກັນ, ພວກເຂົາໄດ້ສ້າງຕັ້ງອານາຈັກຂອງຕົວເອງ, ການກ້າວກ່າຍຂອງພວກເຂົາໄດ້ເຮັດໃຫ້ແຕ່ລະບ່ອນບໍ່ມີຄວາມສະຫງົບ, ພວກເຂົາປິດຕາຂອງພວກເຂົາ ແລະ ສົ່ງສຽງຫອນປານຜີບ້າຢ່າງບໍ່ຢຸດຢັ້ງ, ທຸກຄົນແມ່ນຖືກຂັງໄວ້ຮ່ວມກັນ ແລະ ບັນຍາກາດທີ່ສັບສົນກໍແຜ່ລາມໄປທົ່ວຢ່າງວຸ້ນວາຍ ແລະ ຮຸນແຮງ ແລະ ຜູ້ທີ່ເອົາຕົວເອງໄປຍຶດຕິດກັບຜູ້ອື່ນກໍປາກົດອອກມາເລື້ອຍໆໂດຍທຸກຄົນຈັບຖືຊື່ "ທີ່ໂດ່ງດັງ" ຂອງບັນພະບຸລຸດຂອງພວກເຂົາ. ໝາ ແລະ ໄກ່ເຫຼົ່ານີ້ແມ່ນໄດ້ເອົາພຣະເຈົ້າໄວ້ດ້ານຫຼັງຂອງຈິດໃຈຂອງພວກເຂົາແຕ່ດົນນານມາແລ້ວ ແລະ ບໍ່ເຄີຍສົນໃຈກັບສະພາບຈິດໃຈຂອງພຣະເຈົ້າ. ບໍ່ເປັນຕາແປກໃຈເລີຍທີ່ພຣະເຈົ້າໄດ້ກ່າວວ່າ ມະນຸດຄືໂຕໝາ ແລະ ໂຕໄກ່, ເປັນໝາໂຕໜຶ່ງທີ່ເຫົ່າ ທີ່ເຮັດໃຫ້ໝາອີກຮ້ອຍໂຕຫອນ; ດ້ວຍວິທີນີ້ ພ້ອມກັບສຽງຟົດຟັນ ເຂົາກໍໄດ້ນຳເອົາພາລະກິດຂອງພຣະເຈົ້າມາສູ່ຍຸກປັດຈຸບັນ ໂດຍທີ່ບໍ່ສົນໃຈວ່າ ພາລະກິດຂອງພຣະເຈົ້າແມ່ນເປັນແບບໃດ, ມີຄວາມຍຸຕິທຳ ຫຼື ບໍ່, ພຣະເຈົ້າມີບ່ອນທີ່ວາງຕີນຂອງພຣະອົງລົງ ຫຼື ບໍ່, ມື້ອື່ນຊິເປັນແນວໃດ ເຊິ່ງກ່ຽວກັບຄວາມຕ່ຳຕ້ອຍຂອງເຂົາເອງ ແລະ ຄວາມສົກກະປົກຂອງເຂົາເອງ. ມະນຸດບໍ່ເຄີຍຄິດກ່ຽວກັບສິ່ງຕ່າງໆຫຼາຍປານນັ້ນ, ເຂົາບໍ່ເຄີຍກັງວົນເຖິງຕົວເອງກ່ຽວກັບເລື່ອງຂອງມື້ອື່ນ ແລະ ໄດ້ເກັບເອົາທຸກສິ່ງທີ່ເປັນປະໂຫຍດ ແລະ ມີຄ່າຕໍ່ການໄດ້ຮັບຂອງຕົວເອງ ໂດຍທີ່ບໍ່ຈົ່ງຫຍັງໄວ້ໃຫ້ພຣະເຈົ້ານອກຈາກຂອງເສດ ແລະ ຂອງເຫຼືອ[10]. ມະນຸດຊາດຈັ່ງແມ່ນໂຫດຮ້າຍຫຼາຍ! ເຂົາບໍ່ມີຄວາມຮູ້ສຶກໃຫ້ແກ່ພຣະເຈົ້າ ແລະ ຫຼັງຈາກທີ່ໄດ້ກືນກິນທຸກຢ່າງທີ່ເປັນຂອງພຣະເຈົ້າຢ່າງງຽບໆ ເຂົາກໍໄດ້ໂຍນພຣະເຈົ້າໄປທາງຫຼັງໃຫ້ໄກໆ ໂດຍທີ່ບໍ່ສົນໃຈກ່ຽວກັບການເປັນຢູ່ຂອງພຣະອົງອີກ. ເຂົາຊື່ນຊົມພຣະເຈົ້າ ແຕ່ກໍຍັງຕໍ່ຕ້ານພຣະເຈົ້າ ແລະ ຢຽບຢ່ຳພຣະອົງຢູ່ພື້ນຕີນ ໃນຂະນະທີ່ໃນປາກຂອງເຂົາຂອບໃຈ ແລະ ສັນລະເສີນພຣະເຈົ້າ; ເຂົາອະທິຖານເຖິງພຣະເຈົ້າ ແລະ ອາໄສພຣະເຈົ້າ ໃນຂະນະ

8 "ສັບສົນລະຫວ່າງດຳ ແລະ ຂາວ" ໝາຍເຖິງການປະປົນຄວາມຈິງກັບພາບລວງຕາ ແລະ ຄວາມຊອບທຳກັບຄວາມຊົ່ວຮ້າຍ.

9 "ໂຈນ" ແມ່ນຖືກໃຊ້ເພື່ອບົ່ງບອກວ່າ ຜູ້ຄົນບໍ່ມີສະຕິ ແລະ ຂາດການຢັ່ງຮູ້.

10 "ຂອງເສດ ແລະ ຂອງເຫຼືອ" ແມ່ນຖືກໃຊ້ເພື່ອບົ່ງບອກເຖິງພຶດຕິກຳໃນການທີ່ຜູ້ຄົນກົດຂີ່ພຣະເຈົ້າ.

ດຽວກັນກໍຫຼອກລວງພຣະເຈົ້າ; ເຂົາ "ສັນລະເສີນ" ຊື່ສຽງຂອງພຣະເຈົ້າ ແລະ ແຫງນເບິ່ງໃບໜ້າຂອງພຣະເຈົ້າ ແຕ່ເຂົາກໍຍັງນັ່ງຢູ່ບັນລັງຂອງພຣະເຈົ້າຢ່າງໜ້າດ້ານ ແລະ ບໍ່ມີຢາງອາຍ ແລະ ໄດ້ພິພາກສາ "ຄວາມບໍ່ຊອບທຳ" ຂອງພຣະເຈົ້າ; ຈາກປາກຂອງເຂົາ ແມ່ນຄຳເວົ້າທີ່ວ່າ ເຂົາເປັນໜີ້ບຸນຄຸນຕໍ່ພຣະເຈົ້າ ແລະ ເຂົາເບິ່ງພຣະທຳຂອງພຣະເຈົ້າ ແຕ່ໃນໃຈຂອງເຂົາ ເຂົາກໍກ່າວຄຳຫຍາບຄາຍໃສ່ພຣະເຈົ້າ; ເຂົາ "ອົດທົນ" ຕໍ່ພຣະເຈົ້າ ແຕ່ກໍກົດຂີ່ພຣະເຈົ້າ ແລະ ປາກຂອງເຂົາກໍເວົ້າວ່າ ເຂົາເວົ້າສິ່ງນັ້ນເພື່ອພຣະເຈົ້າ; ໃນມືຂອງເຂົາ ເຂົາຖືສິ່ງຕ່າງໆທີ່ເປັນຂອງພຣະເຈົ້າ ແລະ ໃນປາກຂອງເຂົາ ເຂົາຫຍໍ້າອາຫານທີ່ພຣະເຈົ້າເອົາໃຫ້ເຂົາ ແຕ່ສາຍຕາຂອງເຂົາແມ່ນຈ້ອງເບິ່ງພຣະເຈົ້າດ້ວຍຄວາມເຢັນຊາ ແລະ ບໍ່ມີຄວາມຮູ້ສຶກຫຍັງ ຄືກັບວ່າ ເຂົາປາດຖະໜາທີ່ຈະກືນກິນພຣະອົງທັງໝົດ; ເຂົາເບິ່ງຄວາມຈິງ ແຕ່ກໍຢືນຢັນໃນຄຳເວົ້າທີ່ວ່າ ມັນແມ່ນເລ່ກົນຂອງຊາຕານ; ເຂົາເບິ່ງຄວາມຍຸຕິທຳ ແຕ່ກໍບັງຄັບໃຫ້ຄວາມຍຸຕິທຳກາຍເປັນການປະຕິເສດຕົວເອງ; ເຂົາເບິ່ງການກະທຳຂອງມະນຸດ ແລະ ຢືນຢັນວ່າ ເຂົາແມ່ນສິ່ງທີ່ພຣະເຈົ້າເປັນ; ເຂົາເບິ່ງພອນສະຫວັນຂອງມະນຸດ ແລະ ຢືນຢັນວ່າ ພອນສະຫວັນນັ້ນແມ່ນຄວາມຈິງ; ເຂົາເບິ່ງການກະທຳຂອງພຣະເຈົ້າ ແລະ ຢືນຢັນວ່າ ການກະທຳນັ້ນແມ່ນຄວາມຈອງຫອງ ແລະ ຄວາມອວດດີ, ການເວົ້າໃຫຍ່ ແລະ ການຄິດວ່າຕົວເອງເປັນຝ່າຍຖືກຕ້ອງສະເໝີ; ເມື່ອມະນຸດເບິ່ງພຣະເຈົ້າ ເຂົາກໍຢືນຢັນວ່າ ພຣະອົງເປັນມະນຸດ ແລະ ພະຍາຍາມຫຼາຍທີ່ຈະເອົາພຣະອົງໄປວາງໃສ່ບ່ອນນັ່ງຂອງສິ່ງທີ່ຖືກສ້າງຂຶ້ນ ເຊິ່ງເປັນຜູ້ທີ່ຮ່ວມຫົວກັນກັບຊາຕານ; ເຂົາຮູ້ເປັນຢ່າງດີວ່າ ພວກເຂົາແມ່ນພະຄຳຂອງພຣະເຈົ້າ ແຕ່ກໍຈະບໍ່ເອີ້ນສິ່ງນັ້ນເປັນຢ່າງອື່ນ ນອກຈາກເປັນສິ່ງທີ່ຂີດຂຽນກ່ຽວກັບມະນຸດ; ເຂົາຮູ້ເປັນຢ່າງດີວ່າ ພຣະວິນຍານແມ່ນມີຢູ່ໃນເນື້ອໜັງ, ພຣະເຈົ້າໄດ້ກາຍເປັນເນື້ອໜັງ ແຕ່ກໍເວົ້າວ່າ ເນື້ອໜັງນີ້ແມ່ນລູກຫຼານຂອງຊາຕານເທົ່ານັ້ນ; ເຂົາຮູ້ເປັນຢ່າງດີວ່າ ພຣະເຈົ້າອ່ອນນ້ອມ ແລະ ລີ້ລັບ ແຕ່ກໍເວົ້າວ່າ ຊາຕານຖືກເຮັດໃຫ້ອັບອາຍເທົ່ານັ້ນ ແລະ ພຣະເຈົ້າກໍໄດ້ຊະນະແລ້ວ. ຈັ່ງແມ່ນບໍ່ມີປະໂຫຍດຫຍັງ! ມະນຸດບໍ່ຄູ່ຄວນແມ່ນແຕ່ຊີຮັບໃຊ້ໝາເຝົ້າຍາມ! ເຂົາບໍ່ຈຳແນກລະຫວ່າງສີດຳ ແລະ ສີຂາວ ແລະ ເຖິງກັບບິດເບືອນສີດຳເປັນສີຂາວຢ່າງເຈດຕະນາ. ກຳລັງຂອງມະນຸດ ແລະ ການໂຈມຕີຂອງມະນຸດສາມາດທົນຕໍ່ມື້ແຫ່ງການປົດແອກຂອງພຣະເຈົ້າໄດ້ບໍ? ພາຍຫຼັງທີ່ເຈດຕະນາຕໍ່ຕ້ານພຣະເຈົ້າ, ມະນຸດແມ່ນບໍ່ສົນໃຈ ຫຼື ເຖິງກັບຂັ້ນສັງຫານພຣະອົງ ໂດຍບໍ່ອະນຸຍາດໃຫ້ພຣະເຈົ້າສະແດງຕົນ. ຄວາມຊອບທຳຢູ່ໃສ? ຄວາມຮັກຢູ່ໃສ? ເຂົານັ່ງຢູ່ທາງຂ້າງພຣະເຈົ້າ ແລະ ຊຸກພຣະເຈົ້າໃຫ້ຄຸເຂົ່າເພື່ອອ້ອນວອນຂໍໃຫ້ອະໄພ, ເພື່ອເຊື່ອຟັງການຈັດກຽມທັງໝົດຂອງເຂົາ, ເພື່ອຍອມເຮັດຕາມແຜນການທັງໝົດຂອງເຂົາ ແລະ ເຂົາໄດ້ເຮັດໃຫ້ພຣະເຈົ້າຮັບເອົາບົດບາດຂອງພຣະອົງຈາກເຂົາ ໃນທຸກສິ່ງທີ່ພຣະອົງຊົງເຮັດ ຫຼື ບໍ່ດັ່ງນັ້ນ ເຂົາກໍຈະໃຈຮ້າຍ[11] ແລະ ໂມໂຫຢ່າງໜັກ. ພຣະເຈົ້າຈະບໍ່ເສົ້າໃຈໄດ້ແນວໃດ ພາຍໃຕ້ອິດທິພົນແຫ່ງຄວາມມືດດັ່ງກ່າວ ເຊິ່ງໄດ້ບິດເບືອນສີດຳເປັນສີຂາວ? ພຣະອົງຈະບໍ່ກັງວົນໄດ້ແນວໃດ? ເປັນຫຍັງຈຶ່ງມີການເວົ້າວ່າ ເມື່ອພຣະເຈົ້າເລີ່ມພາລະກິດຫຼ້າສຸດຂອງພຣະອົງ

11 "ໃຈຮ້າຍ" ໝາຍເຖິງໃບໜ້າຂອງມະນຸດທີ່ຂີ້ຮ້າຍ ທີ່ໃຈຮ້າຍ ແລະ ມີຄວາມໂມໂຫ.

ມັນກໍຈະຄືກັນກັບພາລະກິດໃນການສ້າງສະຫວັນ ແລະ ແຜ່ນດິນໂລກ? ການກະທຳຂອງມະນຸດແມ່ນ "ອຸດົມສົມບູນ", "ຕົ້ນນ້ຳຂອງນ້ຳແຫ່ງຊີວິດທີ່ໄຫຼຕະຫຼອດ" ແມ່ນ "ເຕີມເຕັມ" ຈິດໃຈຂອງມະນຸດຢ່າງບໍ່ຢຸດຢັ້ງ ໃນຂະນະທີ່ "ຕົ້ນນ້ຳຂອງນ້ຳແຫ່ງຊີວິດ" ຂອງມະນຸດແມ່ນແຂ່ງຂັນກັບພຣະເຈົ້າໂດຍບໍ່ຄຳນຶງເຖິງສິນທຳ[12]; ສອງຢ່າງນີ້ແມ່ນເຂົ້າກັນບໍ່ໄດ້ ແລະ ມັນໄດ້ສະໜອງໃຫ້ແກ່ຜູ້ຄົນແທນທີ່ພຣະເຈົ້າພ້ອມກັບການພົ້ນໂທດ ໃນຂະນະທີ່ມະນຸດຮ່ວມມືກັບມັນ ໂດຍທີ່ບໍ່ຄຳນຶງເຖິງຄວາມອັນຕະລາຍໃດໆທີ່ກ່ຽວຂ້ອງ. ເພື່ອຜົນຫຍັງ? ເຂົາປະຖິ້ມພຣະເຈົ້າໄວ້ທາງຂ້າງຢ່າງເຢັນຊາ ແລະ ວາງພຣະອົງໄວ້ຢູ່ບ່ອນໄກໆ ກໍຄືບ່ອນທີ່ຜູ້ຄົນຈະບໍ່ສົນໃຈພຣະອົງ ໂດຍທີ່ມີຄວາມຢ້ານຢູ່ຢ່າງເລິກໆວ່າ ພຣະອົງຈະດຶງດູດຄວາມສົນໃຈຂອງພວກເຂົາ ແລະ ກໍຢ້ານຢູ່ເລິກໆວ່າ ຕົ້ນນ້ຳຂອງນ້ຳແຫ່ງຊີວິດຂອງພຣະເຈົ້າຈະລໍ້ມະນຸດ ແລະ ຮັບເອົາມະນຸດ. ສະນັ້ນ, ພາຍຫຼັງປະສົບກັບຄວາມກັງວົນທາງໂລກເປັນເວລາຫຼາຍປີ ເຂົາກໍຮ່ວມມືກັນ ແລະ ຄົບຄິດກັນຕໍ່ຕ້ານພຣະເຈົ້າ ແລະ ເຖິງກັບເຮັດໃຫ້ພຣະເຈົ້າເປັນເປົ້າໝາຍຂອງການລົງໂທດຂອງເຂົາ. ມັນຄືກັບວ່າ ພຣະເຈົ້າໄດ້ກາຍເປັນທ່ອນໄມ້ໃນສາຍຕາຂອງເຂົາ ແລະ ເຂົາກໍຕ້ອງການທີ່ຈະຈັບເອົາພຣະເຈົ້າ ແລະ ເອົາພຣະອົງໄປວາງໃສ່ກອງໄຟ ເພື່ອເຮັດໃຫ້ບໍລິສຸດ ແລະສະອາດ. ເມື່ອເຫັນຄວາມບໍ່ສະບາຍຂອງພຣະເຈົ້າ ມະນຸດກໍຕີເອິກຂອງເຂົາ ແລະ ຫົວຂວັນ, ເຂົາເຕັ້ນລຳດ້ວຍຄວາມມ່ວນຊື່ນ ແລະ ເວົ້າວ່າ ພຣະເຈົ້າຍັງຕົກລົງໄປສູ່ການຫຼໍ່ຫຼອມເຮັດໃຫ້ບໍລິສຸດ ແລະເວົ້າວ່າ ເຂົາຈະຈູດເຜົາຄວາມບໍ່ບໍລິສຸດທີ່ສົກກະປົກຂອງພຣະເຈົ້າໃຫ້ສະອາດ ຄືກັບວ່ານີ້ແມ່ນສິ່ງທີ່ມີເຫດຜົນ ແລະ ເໝາະສົມທີ່ສຸດ ແລະ ຄືກັບວ່າ ສິ່ງເຫຼົ່ານີ້ແມ່ນວິທີການແຫ່ງຍຸຕິທຳ ແລະ ສົມເຫດສົມຜົນຂອງສະຫວັນເທົ່ານັ້ນ. ການປະພຶດທີ່ຮຸນແຮງຂອງມະນຸດນີ້ ເບິ່ງຄືກັບວ່າ ທັງເຈດຕະນາ ແລະບໍ່ມີສະຕິ. ມະນຸດໄດ້ເປີດເຜີຍໃບໜ້າທີ່ຂີ້ຮ້າຍຂອງເຂົາ ແລະ ຈິດວິນຍານທີ່ເປັນຕາຢ້ານ ແລະສົກກະປົກຂອງເຂົາ ພ້ອມກັບລັກສະນະທ່າທາງທີ່ເປັນຕາສັງເວດຂອງຄົນຂໍທານ; ພາຍຫຼັງອາລະວາດຢູ່ທຸກຫົນທຸກແຫ່ງ ເຂົາກໍມີຮູບຮ່າງທີ່ເປັນຕາເວດທະນາ ແລະ ໄດ້ອ້ອນວອນຂໍການໃຫ້ອະໄພຈາກສະຫວັນ ເຊິ່ງຄ້າຍຄືກັນກັບໝານ້ອຍທີ່ເປັນຕາສັງສານທີ່ສຸດ. ມະນຸດປະຕິບັດໃນທາງທີ່ບໍ່ຄາດຄິດສະເໝີ, ເຂົາ "ຂີ່ຫຼັງເສືອເພື່ອເຮັດໃຫ້ຜູ້ອື່ນຢ້ານ"[ກ] ສະເໝີ, ເຂົາປະຕິບັດສ່ວນໜຶ່ງສະເໝີ, ເຂົາບໍ່ພິຈາລະນາເຖິງໃຈຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ ແລະ ເຂົາບໍ່ສົມທຽບສະຖານະຂອງຕົວເອງເລີຍ. ເຂົາພຽງແຕ່ຕໍ່ຕ້ານພຣະເຈົ້າຢ່າງງຽບໆ ຄືກັບວ່າ ພຣະເຈົ້າໄດ້ເຮັດຜິດຕໍ່ເຂົາ ແລະ ບໍ່ຄວນປະຕິບັດກັບເຂົາແບບນັ້ນ ແລະ ຄືກັບວ່າ ສະຫວັນບໍ່ມີຕາ ແລະ ເຈດຕະນາເຮັດໃຫ້ສິ່ງຕ່າງໆລຳບາກສຳລັບເຂົາ. ສະນັ້ນ ມະນຸດຈຶ່ງປະຕິບັດແຜນການທີ່ຊົ່ວຮ້າຍຢ່າງລັບໆ ແລະ ເຂົາບໍ່ຫຼຸດຜ່ອນຄວາມຕ້ອງການຂອງ

---

12 "ໂດຍບໍ່ຄຳນຶງເຖິງສິນທຳ" ໝາຍເຖິງເວລາທີ່ຜູ້ຄົນບໍ່ລະວັງ ແລະ ບໍ່ເຄົາລົບບູຊາພຣະເຈົ້າແມ່ນແຕ່ໜ້ອຍດຽວ.

ກ ການແປແມ່ນອີງໃສ່ຕົ້ນສະບັບ "hú ji h wi", ເຊິ່ງເປັນສຸພາສິດພາສາຈີນ. ມັນອີງໃສ່ນິທານ ທີ່ໝາຈອກໄດ້ເຮັດໃຫ້ສັດໂຕອື່ນໆຢ້ານ ໂດຍການຍ່າງຄຽງຂ້າງໂຕເສືອ ເຊິ່ງດ້ວຍເຫດນັ້ນ ກໍເປັນການ "ຢືມ" ຄວາມຢ້ານ ແລະຊື່ສຽງ ທີ່ໂຕເສືອມີ. ນີ້ແມ່ນການອຸປະມາ ທີ່ຖືກນຳໃຊ້ຢູ່ໃນນີ້ ເພື່ອອ້າງອີງເຖິງຜູ້ຄົນທີ່ "ຢືມ" ຊື່ສຽງຂອງຜູ້ອື່ນເພື່ອເຮັດໃຫ້ຜູ້ອື່ນຢ້ານ ຫຼື ຂົ່ມເຫັງພວກເຂົາ.

ເຂົາທີ່ມີຕໍ່ພຣະເຈົ້າແມ່ນແຕ່ໜ້ອຍດຽວ ໂດຍແນມເບິ່ງດ້ວຍສາຍຕາຂອງສັດລ່າເຫຍື່ອ, ກົ້ງຕາຢ່າງໃຈຮ້າຍໃສ່ທຸກການກະທຳຂອງພຣະເຈົ້າ, ບໍ່ເຄີຍຄິດວ່າ ເຂົາເປັນສັດຕູຂອງພຣະເຈົ້າ ແລະ ຫວັງວ່າ ມື້ທີ່ພຣະເຈົ້າອອກຈາກໝອກຈະມາເຖິງ, ເຮັດໃຫ້ສິ່ງຕ່າງໆແຈ່ມແຈ້ງ, ຊ່ວຍເຂົາຈາກ "ປາກເສືອ" ແລະ ແກ້ໄຂຂໍ້ຂ້ອງໃຈຂອງເຂົາ. ແມ່ນແຕ່ໃນປັດຈຸບັນ ຜູ້ຄົນຍັງບໍ່ຄິດວ່າ ພວກເຂົາກຳລັງຫຼິ້ນບົດບາດໃນການຕໍ່ຕ້ານພຣະເຈົ້າ ທີ່ຫຼາຍຄົນໄດ້ຫຼິ້ນໃນທຸກໆຍຸກ; ໃນທຸກສິ່ງທີ່ພວກເຂົາເຮັດ ພວກເຂົາຈະສາມາດຮູ້ສິ່ງນັ້ນໄດ້ແນວໃດວ່າ ພວກເຂົາໄດ້ຫຼົງທາງແຕ່ດົນນານແລ້ວ ແລະ ສິ່ງດຽວທີ່ພວກເຂົາເຂົ້າໃຈແມ່ນຖືກທະເລດູດກືນໄປດົນນານແລ້ວ.

ມີໃຜແນ່ທີ່ເຄີຍຍອມຮັບຄວາມຈິງ? ມີໃຜແນ່ທີ່ເຄີຍຕ້ອນຮັບພຣະເຈົ້າແບບອ້າແຂນຮັບ? ມີໃຜແນ່ທີ່ເຄີຍປາດຖະໜາຢ່າງມີຄວາມສຸກຕໍ່ການປາກົດຕົວຂອງພຣະເຈົ້າ? ການປະພຶດຂອງມະນຸດແມ່ນເນົ່າເປື່ອຍແຕ່ດົນນານແລ້ວ ແລະ ຄວາມສົກກະປົກຂອງເຂົາກໍໄດ້ອອກຈາກພຣະວິຫານຂອງພຣະເຈົ້າແຕ່ດົນນານແລ້ວຈົນຈື່ບໍ່ໄດ້. ໃນຂະນະດຽວກັນ ມະນຸດຍັງປະຕິບັດພາລະກິດຂອງຕົວເອງ ໂດຍດູຖູກພຣະເຈົ້າ. ມັນຄືກັບວ່າ ການຕໍ່ຕ້ານຂອງເຂົາຕໍ່ພຣະເຈົ້າແມ່ນຖືກແກະສະຫຼັກໃສ່ກ້ອນຫີນ ແລະ ຍາກທີ່ຈະປ່ຽນແປງໄດ້ ແລະ ດ້ວຍເຫດນັ້ນ ເຂົາຈຶ່ງເລືອກທີ່ຈະຖືກສາບແຊ່ງ ແທນທີ່ຈະຕ້ອງທົນທຸກກັບການທາລຸນດ້ວຍຄຳເວົ້າ ແລະ ການກະທຳຂອງເຂົາເພີ່ມຂຶ້ນ. ຜູ້ຄົນແບບນີ້ຈະສາມາດຮູ້ຈັກພຣະເຈົ້າໄດ້ແນວໃດ? ພວກເຂົາຈະສາມາດຊອກຫາຄວາມສະຫງົບກັບພຣະເຈົ້າໄດ້ແນວໃດ? ພວກເຂົາຈະຄູ່ຄວນທີ່ຈະມາຢູ່ຕໍ່ໜ້າພຣະເຈົ້າໄດ້ແນວໃດ? ແນ່ນອນ ມັນບໍ່ມີຫຍັງຜິດກັບການອຸທິດຕົນເພື່ອແຜນການຄຸ້ມຄອງຂອງພຣະເຈົ້າ ແຕ່ເປັນຫຍັງຜູ້ຄົນຈຶ່ງເອົາພາລະກິດຂອງພຣະເຈົ້າ ແລະ ພຣະເຈົ້າທັງໝົດໄປໄວ້ຢູ່ດ້ານຫຼັງຈິດໃຈຂອງພວກເຂົາຕະຫຼອດເວລາ ໃນຂະນະດຽວກັນ ກໍອຸທິດເລືອດ ແລະ ນໍ້າຕາຂອງພວກເຂົາຢ່າງບໍ່ເຫັນແກ່ຕົວ? ແນ່ນອນ ຈິດວິນຍານແຫ່ງການອຸທິດຕົນຢ່າງບໍ່ເຫັນແກ່ຕົວຂອງມະນຸດແມ່ນມີຄ່າຫຼາຍແຕ່ພວກເຂົາຈະສາມາດຮູ້ໄດ້ແນວໃດວ່າ "ເສັ້ນໄໝ" ທີ່ພວກເຂົາປັ່ນຢູ່ນັ້ນບໍ່ສາມາດເປັນຕົວແທນໃຫ້ແກ່ສິ່ງທີ່ພຣະເຈົ້າເປັນຢ່າງແທ້ຈິງ? ເຈດຕະນາດີຂອງຜູ້ຄົນແມ່ນມີຄ່າ ແລະ ຫາຍາກໂດຍທີ່ບໍ່ຕ້ອງສົງໄສ ແຕ່ພວກເຂົາຈະສາມາດກືນ "ຊັບສົມບັດທີ່ລໍ້າຄ່າ"[13] ໄດ້ແນວໃດ? ພວກເຈົ້າແຕ່ລະຄົນຄວນຄິດກ່ຽວກັບອະດີດຂອງຕົວເອງ: ເປັນຫຍັງພວກເຈົ້າຈຶ່ງບໍ່ເຄີຍແຍກອອກຈາກການຂ້ຽນຕີ ແລະ ການສາບແຊ່ງທີ່ໂຫດຮ້າຍ? ເປັນຫຍັງຜູ້ຄົນຈຶ່ງມີ "ຄຳສັບທີ່ຄຸ້ນເຄີຍ" ກັບຄຳເວົ້າທີ່ສະຫງ່າງາມ ແລະ ການພິພາກສາທີ່ຊອບທຳ? ພຣະເຈົ້າກຳລັງທົດສອບພວກເຂົາແທ້ບໍ? ພຣະເຈົ້າກຳລັງເຮັດໃຫ້ພວກເຂົາບໍລິສຸດໂດຍເຈດຕະນາບໍ? ແລ້ວຜູ້ຄົນຈະເຂົ້າສູ່ການຫຼໍ່ຫຼອມເຮັດໃຫ້ບໍລິສຸດໄດ້ແນວໃດ? ພວກເຂົາຮູ້ຈັກພາລະກິດຂອງພຣະເຈົ້າຢ່າງແທ້ຈິງບໍ? ບົດຮຽນຫຍັງທີ່ຜູ້ຄົນໄດ້ຮຽນຮູ້ຈາກພາລະກິດຂອງພຣະເຈົ້າ ແລະ ທາງເຂົ້າຂອງພວກເຂົາ? ຂໍໃຫ້ຜູ້ຄົນຈົ່ງລືມການແນະນຳຂອງພຣະເຈົ້າ, ແລະ ຂໍໃຫ້ພວກເຂົາຈົ່ງຢັ່ງຮູ້ເຖິງພາລະກິດຂອງພຣະເຈົ້າ ໂດຍລະບຸເຖິງສິ່ງນີ້ຢ່າງຊັດເຈນ ແລະ ຈັດການກັບທາງເຂົ້າຂອງພວກເຂົາຢ່າງຖືກຕ້ອງ.

---

13 "ຊັບສົມບັດທີ່ລໍ້າຄ່າ" ໝາຍເຖິງພຣະເຈົ້າທັງໝົດ.

# ພາລະກິດ ແລະ ທາງເຂົ້າ (10)

ການທີ່ມະນຸດຊາດໄດ້ຄືບໜ້າມາໄກຂະໜາດນີ້ແມ່ນເປັນສະຖານະການທີ່ບໍ່ເຄີຍມີມາກ່ອນ. ພາລະກິດຂອງພຣະເຈົ້າ ແລະ ທາງເຂົ້າຂອງມະນຸດໄດ້ກ້າວໜ້າຢ່າງຄຽງບ່າຄຽງໄຫຼ່ກັນ ແລະ ສະນັ້ນ ພາລະກິດຂອງພຣະເຈົ້າກໍ່ເປັນເຫດການພິເສດທີ່ບໍ່ມີຫຍັງທຽບໄດ້ເຊັ່ນກັນ. ທາງເຂົ້າຂອງມະນຸດໃນປັດຈຸບັນຄືສິ່ງມະຫັດສະຈັນທີ່ມະນຸດບໍ່ເຄີຍຈິນຕະນາການມາກ່ອນ. ພາລະກິດຂອງພຣະເຈົ້າໄດ້ໄປເຖິງຈຸດສຸດຍອດ ແລະ ຕໍ່ມາ "ທາງເຂົ້າ"[1] ຂອງມະນຸດກໍໄປເຖິງຈຸດສູງສຸດເຊັ່ນດຽວກັນ. ພຣະເຈົ້າໄດ້ລົດຕົວພຣະອົງເອງລົງຫຼາຍເທົ່າທີ່ພຣະອົງສາມາດເຮັດໄດ້ ແລະ ພຣະອົງບໍ່ເຄີຍປະທ້ວງຕໍ່ມະນຸດຊາດ ຫຼື ຕໍ່ຈັກກະວານ ແລະ ສິ່ງທັງປວງຈັກເທື່ອ. ໃນຂະນະດຽວກັນ ມະນຸດໄດ້ຢືນຢູ່ເທິງຫົວຂອງພຣະເຈົ້າ ແລະ ການກົດຂີ່ພຣະເຈົ້າຂອງມະນຸດໄດ້ໄປເຖິງຈຸດສຸດຍອດ; ທຸກສິ່ງໄດ້ໄປເຖິງຈຸດສູງສຸດ ແລະ ມັນເຖິງເວລາສຳລັບມື້ທີ່ຄວາມຊອບທຳຈະປາກົດຂຶ້ນ. ເປັນຫຍັງຈຶ່ງສືບຕໍ່ໃຫ້ຄວາມເສົ້າໝອງປົກຄຸມແຜ່ນດິນ ແລະ ຄວາມມືດມົວປົກຄຸມຜູ້ຄົນທັງປວງ? ພຣະເຈົ້າໄດ້ເຝົ້າເບິ່ງເປັນເວລາສອງສາມພັນປີ, ອາດຈະຮອດຫຼາຍສິບພັນປີ ແລະ ຄວາມອົດກັ້ນຂອງພຣະອົງກໍເຖິງຈຸດສູງສຸດຕັ້ງແຕ່ດົນນານມາແລ້ວ. ພຣະອົງເບິ່ງທຸກການເຄື່ອນໄຫວຂອງມະນຸດຊາດ, ພຣະອົງສັງເກດເບິ່ງວ່າ ຄວາມບໍ່ຊອບທຳຂອງມະນຸດຈະກໍ່ຄວາມວຸ້ນວາຍໄດ້ດົນສໍ່າໃດ ແລະ ເຖິງຢ່າງນັ້ນກໍຕາມມະນຸດຜູ້ທີ່ຕາຍດ້ານຕັ້ງແຕ່ດົນແລ້ວກໍຍັງບໍ່ຮູ້ສຶກຫຍັງເລີຍ. ແລ້ວຜູ້ໃດເຄີຍສັງເກດເບິ່ງການກະທຳຂອງພຣະເຈົ້າແດ່? ຜູ້ໃດເຄີຍເຫຼືອກຕາຂອງພວກເຂົາ ແລະ ເບິ່ງໄປທາງໄກ? ຜູ້ໃດເຄີຍຟັງຢ່າງລະມັດລະວັງ? ຜູ້ໃດເຄີຍຢູ່ໃນກຳມືຂອງອົງຊົງລິດທານຸພາບສູງສຸດແດ່? ທຸກຄົນເສຍຂວັນຍ້ອນຄວາມຢ້ານໃນຈິນຕະນາການ[2]. ກອງຫຍ້າແຫ້ງ ແລະ ເຟືອງຈະມີປະໂຫຍດຫຍັງ? ສິ່ງດຽວທີ່ພວກເຂົາສາມາດເຮັດໄດ້ກໍຄືທໍລະມານພຣະເຈົ້າທີ່ບັງເກີດເປັນມະນຸດຈົນຕາຍ. ເຖິງແມ່ນພວກເຂົາເປັນພຽງແຕ່ກອງຫຍ້າແຫ້ງ ແລະ ເຟືອງ, ຍັງມີສິ່ງໜຶ່ງທີ່ພວກເຂົາສາມາດເຮັດ "ໄດ້ດີທີ່ສຸດ"[3] ນັ້ນກໍຄື ການທໍລະມານພຣະເຈົ້າຈົນຕາຍ ແລະ ຫຼັງຈາກນັ້ນກໍຮ້ອງຂຶ້ນວ່າ "ມັນເຮັດໃຫ້ຫົວໃຈຂອງຜູ້ຄົນປິຕິຍິນດີ". ຊ່າງເປັນພວກທະຫານກຸ້ງ ແລະ ນາຍພົນປູແທ້ໆ! ຢ່າງໜ້າສັງເກດກໍຄື ໃນທ່າມກາງກະແສທີ່ບໍ່ຢຸດເຊົາຂອງຜູ້ຄົນ, ພວກເຂົາໃສ່ໃຈແຕ່ກັບພຣະເຈົ້າ, ອ້ອມລ້ອມພຣະອົງດ້ວຍສິ່ງປິດກັ້ນທີ່ບໍ່ສາມາດຜ່ານເຂົ້າໄດ້. ຄວາມຮ້ອນຮົນຂອງພວກເຂົາເຜົາໄໝ້ຢ່າງຮ້າຍແຮງ

1 "'ທາງເຂົ້າ' ຂອງມະນຸດ" ໃນທີ່ນີ້ໝາຍເຖິງພຶດຕິກຳທີ່ບໍ່ເຊື່ອຟັງຂອງມະນຸດ. ແທນທີ່ຈະໝາຍເຖິງການທີ່ຜູ້ຄົນເຂົ້າສູ່ຊີວິດ ເຊິ່ງເປັນດ້ານບວກ, ມັນໝາຍເຖິງພຶດຕິກຳ ແລະ ການກະທຳດ້ານລົບຂອງພວກເຂົາ. ໃນຄວາມໝາຍກວ້າງໆ ມັນໝາຍເຖິງການກະທຳທຸກຢ່າງຂອງມະນຸດທີ່ຕໍ່ຕ້ານພຣະເຈົ້າ.

2 "ເສຍຂວັນຍ້ອນຄວາມຢ້ານໃນຈິນຕະນາການ" ແມ່ນໃຊ້ເພື່ອເຍາະເຍີ້ຍຊີວິດແຫ່ງຄວາມເປັນມະນຸດທີ່ຖືກນຳພາຢ່າງຜິດໆ. ມັນໝາຍເຖິງສະພາວະຊີວິດຂີ້ຮ້າຍຂອງມະນຸດຊາດ ທີ່ຜູ້ຄົນດຳລົງຊີວິດຢູ່ຮ່ວມກັນກັບຜີຮ້າຍ.

3 "ໄດ້ດີທີ່ສຸດ" ແມ່ນເວົ້າເພື່ອເຍາະເຍີ້ຍ.

ຍິ່ງຂຶ້ນ[4], ພວກເຂົາລຸມພຣະເຈົ້າ ຈົນພຣະອົງບໍ່ສາມາດຍັບໄດ້ແມ່ນແຕ່ນ້ອຍດຽວ. ໃນມືຂອງພວກເຂົາ, ພວກເຂົາຖືອາວຸດທຸກປະເພດ ແລະ ຫຼຽວເບິ່ງພຣະເຈົ້າຄືກັບຫຼຽວເບິ່ງສັດຕູ, ຕາຂອງພວກເຂົາເຕັມໄປດ້ວຍຄວາມໃຈຮ້າຍ; ພວກເຂົາປາຖະໜາທີ່ຈະ "ຈີກພຣະເຈົ້າອອກເປັນຊິ້ນເປັນສ່ວນ". ຊ່າງໜ້າພິດສະຫວົງ! ເປັນຫຍັງມະນຸດ ແລະ ພຣະເຈົ້າຈຶ່ງເປັນສັດຕູທີ່ບໍ່ສາມາດຄືນດີກັນໄດ້? ມັນເປັນໄປໄດ້ບໍວ່າມີຄວາມອາຄາດແຄ້ນລະຫວ່າງພຣະເຈົ້າທີ່ເປັນຕາຮັກທີ່ສຸດ ແລະ ມະນຸດ? ເປັນໄປໄດ້ບໍວ່າການກະທຳຂອງພຣະເຈົ້າບໍ່ມີປະໂຫຍດຫຍັງສຳລັບມະນຸດເລີຍ? ສິ່ງເຫຼົ່ານັ້ນທຳຮ້າຍມະນຸດບໍ? ມະນຸດຈ້ອງເບິ່ງພຣະເຈົ້າຢ່າງໃກ້ຊິດ, ຢ້ານຢູ່ເລິກໆວ່າພຣະອົງຈະຜ່ານສິ່ງປິດກັ້ນຂອງມະນຸດໄປໄດ້, ກັບຄືນສູ່ສະຫວັນຊັ້ນສາມ ແລະ ໂຍນມະນຸດລົງສູ່ຄຸກໃຕ້ດິນອີກຄັ້ງ. ມະນຸດລະມັດລະວັງພຣະເຈົ້າ, ເຂົາໃຈຂວ້ຳໃຈຫງ່າຍ ແລະ ດີ້ນໄປດີ້ນມາເທິງພື້ນດິນ ຢູ່ໃນໄລຍະໄກ, ຖື "ປືນກົນ" ໂດຍແນໃສ່ພຣະເຈົ້າທີ່ຢູ່ທ່າມກາງມະນຸດ. ມັນຄືກັບວ່າ ຖ້າມີການກະຕຸ້ນແມ່ນແຕ່ໜ້ອຍດຽວຈາກພຣະເຈົ້າ ມະນຸດຈະທຳລາຍລ້າງທຸກສິ່ງທີ່ກ່ຽວກັບພຣະອົງ, ຮ່າງກາຍທັງໝົດຂອງພຣະອົງ ແລະ ທຸກສິ່ງທີ່ພຣະອົງນຸ່ງ, ໂດຍບໍ່ປ່ອຍໃຫ້ສິ່ງໃດຫຼົງເຫຼືອເລີຍ. ຄວາມສຳພັນລະຫວ່າງພຣະເຈົ້າ ແລະ ມະນຸດແມ່ນເກີນການແກ້ໄຂ. ມະນຸດບໍ່ສາມາດເຂົ້າໃຈພຣະເຈົ້າໄດ້; ໃນຂະນະດຽວກັນ ມະນຸດກໍຕັ້ງໃຈຫຼັບຕາຂອງເຂົາ ແລະ ຫຼີ້ນກິນໄປວັນໆ, ໂດຍບໍ່ເຕັມໃຈທີ່ຈະເຫັນການເປັນຢູ່ຂອງເຮົາທັງສິ້ນ ແລະ ບໍ່ໃຫ້ອະໄພການພິພາກສາຂອງເຮົາ. ສະນັ້ນ ເມື່ອເວລາມະນຸດບໍ່ໄດ້ຄາດຄິດ, ເຮົາກໍຈະລອຍໜີໄປຢ່າງງຽບໆ ແລະ ເຮົາຈະບໍ່ປຽບທຽບກັບມະນຸດອີກຕໍ່ໄປວ່າຜູ້ໃດສູງສົ່ງ ແລະ ຜູ້ໃດຕ່ຳຕ້ອຍ. ມະນຸດຊາດເປັນ "ສັດ" ທີ່ຕ່ຳຕ້ອຍທີ່ສຸດໃນບັນດາທຸກສິ່ງ ແລະ ເຮົາບໍ່ປາຖະໜາທີ່ຈະສົນໃຈເຂົາອີກຕໍ່ໄປ. ເຮົາໄດ້ນຳຄວາມກະລຸນາທັງໝົດຂອງເຮົາກັບຄືນສູ່ບ່ອນທີ່ເຮົາຢູ່ອາໄສຢ່າງສະຫງົບສຸກແຕ່ດົນມາແລ້ວ; ຍ້ອນມະນຸດບໍ່ເຊື່ອຟັງຫຼາຍ, ເຂົາມີເຫດຜົນຫຍັງທີ່ຈະໄດ້ຮັບຄວາມກະລຸນາທີ່ລ້ຳຄ່າຂອງເຮົາອີກ? ເຮົາບໍ່ເຕັມໃຈທີ່ຈະປະທານຄວາມກະລຸນາຂອງເຮົາໃຫ້ກັບກອງກຳລັງທີ່ບໍ່ເປັນມິດກັບເຮົາຢ່າງໄຮ້ປະໂຫຍດ. ເຮົາຈະມອບໝາກໄມ້ທີ່ລ້ຳຄ່າຂອງເຮົາໃຫ້ກັບຊາວນາແຫ່ງການາອານທີ່ກະຕືລືລົ້ນ ແລະ ຕ້ອນຮັບການກັບມາຂອງເຮົາຢ່າງເອົາຈິງເອົາຈັງ. ເຮົາປາຖະໜາພຽງແຕ່ໃຫ້ສະຫວັນມີຢູ່ຕະຫຼອດໄປ ແລະ ຫຼາຍກວ່ານັ້ນກໍຄື ໃຫ້ມະນຸດບໍ່ເຖົ້າແກ່ຈັກເທື່ອ, ໃຫ້ສະຫວັນ ແລະ ມະນຸດມີສັນຕິສຸກຕະຫຼອດໄປ ແລະ ໃຫ້ "ຕົ້ນແປກ ແລະ ຕົ້ນສົນ" ທີ່ຂຽວຕະຫຼອດປີເຫຼົ່ານັ້ນຢູ່ຮ່ວມກັບພຣະເຈົ້າຕະຫຼອດໄປ ແລະ ຕິດຕາມສະຫວັນໃນການເຂົ້າສູ່ຍຸກແຫ່ງອຸດົມຄະຕິຮ່ວມກັນຕະຫຼອດໄປ.

ເຮົາໃຊ້ເວລາຫຼາຍມື້ ແລະ ຫຼາຍຄືນກັບມະນຸດ, ເຮົາໄດ້ອາໄສໃນໂລກຮ່ວມກັນກັບມະນຸດ ແລະ ເຮົາບໍ່ເຄີຍຮຽກຮ້ອງເພີ່ມຈາກມະນຸດ; ເຮົາພຽງແຕ່ນຳພາມະນຸດໄປທາງໜ້າ, ເຮົາບໍ່ໄດ້ເຮັດຫຍັງນອກຈາກນຳພາມະນຸດ ແລະ ຍ້ອນເຫັນແກ່ໂຊກຊະຕາຂອງມະນຸດຊາດ, ເຮົາຈຶ່ງປະຕິບັດພາລະກິດແຫ່ງ

4 "ຄວາມຮ້ອນຮົນຂອງພວກເຂົາເຜົາໄໝ້ຢ່າງຮ້າຍແຮງຍິ່ງຂຶ້ນ" ແມ່ນເວົ້າເພື່ອເຍາະເຍີ້ຍ ແລະ ໝາຍເຖິງສະພາວະຂີ້ຮ້າຍຂອງມະນຸດ.

ການຈັດແຈງຢ່າງບໍ່ຢຸດເຊົາ. ຜູ້ໃດເຄີຍເຂົ້າໃຈຄວາມປະສົງຂອງພຣະບິດາໃນສະຫວັນແດ່? ມີໃຜເຄີຍຂ້າມຜ່ານລະຫວ່າງສະຫວັນ ແລະ ແຜ່ນດິນໂລກບໍ່? ເຮົາບໍ່ປາຖະໜາທີ່ຈະໃຊ້ "ອາຍຸເຖົ້າແກ່" ຂອງມະນຸດຮ່ວມກັບເຂົາອີກຕໍ່ໄປ, ຍ້ອນມະນຸດເປັນຄົນຫົວໂບຮານເກີນໄປ, ເຂົາບໍ່ເຂົ້າໃຈຫຍັງເລີຍ, ສິ່ງດຽວທີ່ເຂົາຮູ້ກໍຄືກິນໃນງານລ້ຽງທີ່ເຮົາໄດ້ຈັດຂຶ້ນຈົນແໜ້ນທ້ອງ, ບໍ່ຫຍຸ້ງກ່ຽວກັບສິ່ງອື່ນໃດ, ບໍ່ສົນໃຈກັບບັນຫາອື່ນໆເລີຍ. ມະນຸດຊາດຂີ້ຮ້າຍຫຼາຍເກີນໄປ, ວຸ້ນວາຍ, ເສົ້າໝອງ ແລະ ຄວາມອັນຕະລາຍຢູ່ທ່າມກາງມະນຸດແມ່ນສູງເກີນໄປ ແລະ ສະນັ້ນ ເຮົາຈຶ່ງບໍ່ປາຖະໜາທີ່ຈະແບ່ງປັນໝາກໄມ້ທີ່ລ້ຳຄ່າແຫ່ງການເອົາຊະນະໃນຍຸກສຸດທ້າຍ. ໃຫ້ມະນຸດຮັບເອົາພອນທີ່ອຸດົມສົມບູນທີ່ເຂົາເອງໄດ້ສ້າງຂຶ້ນ, ໃນເມື່ອມະນຸດບໍ່ຕ້ອນຮັບເຮົາ, ແລ້ວເຫດໃດເຮົາຈຶ່ງຄວນບັງຄັບໃຫ້ມະນຸດທຳທ່າຍິ້ມໃຫ້ກັບເຮົາ? ທຸກມຸມໂລກແມ່ນປາສະຈາກຄວາມອົບອຸ່ນ, ບໍ່ມີຮ່ອງຮອຍຂອງລະດູໃບໄມ້ປົ່ງທົ່ວພູມມີປະເທດເທິງແຜ່ນດິນໂລກ, ຍ້ອນມະນຸດບໍ່ມີຄວາມອົບອຸ່ນແມ່ນແຕ່ໜ້ອຍດຽວຄືກັບສັດທີ່ອາໄສໃນນ້ຳ, ເຂົາເປັນຄືກັບຊາກສົບ ແລະ ແມ່ນແຕ່ເລືອດທີ່ໄຫຼຜ່ານເສັ້ນເລືອດຂອງເຂົາກໍເປັນຄືກັບນ້ຳກ້ອນແຊ່ເຢັນທີ່ເຢືອກເຢັນໃນຫົວໃຈ. ຄວາມອົບອຸ່ນແມ່ນຢູ່ໃສ? ມະນຸດໄດ້ຄຶງພຣະເຈົ້າເທິງໄມ້ກາງແຂນໂດຍບໍ່ມີເຫດຜົນ ແລະ ຫຼັງຈາກນັ້ນ ເຂົາກໍບໍ່ໄດ້ຮູ້ສຶກຜິດແມ່ນແຕ່ໜ້ອຍດຽວ. ບໍ່ມີໃຜເຄີຍຮູ້ສຶກເສຍໃຈຈັກເທື່ອ ແລະ ທໍລະລາດທີ່ໂຫດຮ້າຍເຫຼົ່ານີ້ກໍຍັງວາງແຜນທີ່ຈະ "ຈັບເປັນ"[5] ບຸດມະນຸດອີກຄັ້ງ ແລະ ນຳພຣະອົງມາຢູ່ຕໍ່ໜ້າເພັດຊະຄາດ, ເພື່ອນຳຈຸດຈົບມາສູ່ຄວາມກຽດຊັງທີ່ຢູ່ພາຍໃນຫົວໃຈຂອງພວກເຂົາ. ແມ່ນຫຍັງຄືຜົນປະໂຫຍດຂອງການທີ່ເຮົາຍັງຄົງຢູ່ໃນດິນແດນທີ່ອັນຕະລາຍນີ້? ຖ້າເຮົາຍັງຢູ່, ສິ່ງດຽວທີ່ເຮົາຈະນຳມາໃຫ້ມະນຸດແມ່ນຄວາມຂັດແຍ້ງ ແລະ ຄວາມຮຸນແຮງ ແລະ ບັນຫາທີ່ບໍ່ຈົບສິ້ນ, ຍ້ອນເຮົາບໍ່ເຄີຍນຳສັນຕິສຸກມາໃຫ້ມະນຸດ, ມີພຽງແຕ່ສົງຄາມ. ຍຸກສຸດທ້າຍຂອງມະນຸດຊາດຕ້ອງເຕັມໄປດ້ວຍສົງຄາມ ແລະ ຈຸດໝາຍປາຍທາງຂອງມະນຸດຕ້ອງໂຄ່ນລົ້ມຢູ່ທ່າມກາງຄວາມຮຸນແຮງ ແລະ ຄວາມຂັດແຍ້ງ. ເຮົາບໍ່ເຕັມໃຈທີ່ຈະເຂົ້າຮ່ວມໃນ "ຄວາມປິຕິຍິນດີ" ໃນສົງຄາມ, ເຮົາຈະບໍ່ຢູ່ຮ່ວມໃນການນອງເລືອດ ແລະ ການເສຍສະຫຼະຂອງມະນຸດ, ຍ້ອນການປະຕິເສດຂອງມະນຸດໄດ້ເຮັດໃຫ້ເຮົາ "ທໍ້ຖອຍໃຈ" ແລະ ເຮົາບໍ່ມີຈິດໃຈທີ່ຈະຫຼຽວເບິ່ງສົງຄາມຂອງມະນຸດ, ໃຫ້ມະນຸດຕໍ່ສູ້ກັນຈົນເຂົາພໍໃຈ. ເຮົາປາຖະໜາທີ່ຈະພັກຜ່ອນ, ເຮົາປາຖະໜາທີ່ຈະນອນ; ໃຫ້ຜີຮ້າຍເປັນເພື່ອນຂອງມະນຸດຊາດໃນລະຫວ່າງຍຸກສຸດທ້າຍຂອງເຂົາ! ຜູ້ໃດຮູ້ຈັກຄວາມປະສົງຂອງເຮົາບໍ່? ເພາະເຮົາບໍ່ຖືກຍອມຮັບໂດຍມະນຸດ ແລະ ເຂົາບໍ່ເຄີຍລໍຖ້າເຮົາຈັກເທື່ອ, ເຮົາຈຶ່ງພຽງແຕ່ໄດ້ບອກອຳລາເຂົາ ແລະ ເຮົາກໍມອບຈຸດໝາຍປາຍທາງຂອງມະນຸດໃຫ້ກັບເຂົາ, ເຮົາປະຄວາມຮັ່ງມີທຸກຢ່າງຂອງເຮົາໄວ້ໃຫ້ກັບມະນຸດ, ຫວ່ານຊີວິດຂອງເຮົາຢູ່ທ່າມກາງມະນຸດ, ປູກເມັດພືດແຫ່ງຊີວິດຂອງເຮົາໃນທົ່ງນາທີ່ຢູ່ໃນຫົວໃຈຂອງມະນຸດ, ປະຄວາມຊົງຈຳທີ່ບໍ່ຮູ້ຈັກຈົບໄວ້ໃຫ້ກັບເຂົາ, ປະຄວາມຮັກທັງໝົດຂອງເຮົາໄວ້

5 "ຈັບເປັນ" ໝາຍເຖິງພຶດຕິກຳທີ່ຮຸນແຮງ ແລະ ຊົ່ວຊ້າຂອງມະນຸດ. ມະນຸດໂຫດຮ້າຍ ແລະ ບໍ່ຍົກໂທດໃຫ້ພຣະເຈົ້າແມ່ນແຕ່ໜ້ອຍດຽວ ແລະ ຮຽກຮ້ອງຢ່າງບໍ່ສົມເຫດສົມຜົນຈາກພຣະອົງ.

ໃຫ້ກັບມະນຸດຊາດ ແລະ ມອບທຸກສິ່ງທີ່ມະນຸດຊື່ນຊົມໃນຕົວເຮົາໃຫ້ກັບມະນຸດ, ເປັນຂອງຂວັນແຫ່ງຄວາມຮັກທີ່ພວກເຮົາປາຖະໜາເຊິ່ງກັນແລະກັນ. ເຮົາປາຖະໜາໃຫ້ພວກເຂົາຮັກກັນຕະຫຼອດໄປ, ໃຫ້ມື້ວານຂອງພວກເຂົາເປັນສິ່ງສວຍງາມທີ່ພວກເຮົາມອບໃຫ້ກັນແລະກັນ, ຍ້ອນເຮົາໄດ້ມອບທັງໝົດຂອງເຮົາໃຫ້ກັບມະນຸດຊາດແລ້ວ, ມະນຸດຈະສາມາດມີຄຳຕໍ່ວ່າຫຍັງອີກ? ເຮົາໄດ້ປະຊີວິດທັງໝົດຂອງເຮົາໄວ້ໃຫ້ກັບມະນຸດແລ້ວ ແລະ ເຮົາໄດ້ເຮັດວຽກໜັກເພື່ອໄຖດິນແດນທີ່ສວຍງາມແຫ່ງຄວາມຮັກສຳລັບມະນຸດຊາດ; ເຮົາບໍ່ເຄີຍຮຽກຮ້ອງຈາກມະນຸດຢ່າງເປັນທຳຈັກເທື່ອ ແລະ ບໍ່ໄດ້ເຮັດຫຍັງນອກຈາກຍອມຢູ່ພາຍໃຕ້ການປັ້ນແຕ່ງຂອງມະນຸດເທົ່ານັ້ນ ແລະ ສ້າງມື້ອື່ນທີ່ສວຍງາມຂຶ້ນສຳລັບມະນຸດຊາດ.

ເຖິງແມ່ນພາລະກິດຂອງພຣະເຈົ້າອຸດົມສົມບູນ ແລະ ມີຫຼາຍ, ທາງເຂົ້າຂອງມະນຸດກໍຂາດຕົກບົກຜ່ອງຫຼາຍ. ຈາກ “ກິດຈະການ” ຮ່ວມລະຫວ່າງມະນຸດ ແລະ ພຣະເຈົ້າ, ເກືອບທັງໝົດແມ່ນພາລະກິດຂອງພຣະເຈົ້າ; ແຕ່ສຳລັບວ່າມະນຸດໄດ້ເຂົ້າສູ່ຫຼາຍສໍ່າໃດນັ້ນ, ເຂົາເກືອບບໍ່ມີຫຍັງໃຫ້ສະແດງເລີຍ. ແມ່ນແຕ່ມະນຸດ ຜູ້ທີ່ທຸກຍາກ ແລະ ຕາບອດກໍຍັງວັດແທກກຳລັງຂອງເຂົາກັບພຣະເຈົ້າໃນປັດຈຸບັນດ້ວຍ “ອາວຸດໂບຮານ” ໃນມືຂອງເຂົາເລີຍ. “ທະນີປ່າເຖື່ອນ” ເຫຼົ່ານີ້ທີ່ເກືອບຈະຍ່າງສອງຂາບໍ່ໄດ້ ແລະ ພວກເຂົາບໍ່ມີຢາງອາຍໃນຮ່າງກາຍທີ່ “ເປືອຍ” ຂອງພວກເຂົາ. ພວກເຂົາມີຄຸນສົມບັດຫຍັງທີ່ຈະປະເມີນພາລະກິດຂອງພຣະເຈົ້າ? ສາຍຕາຂອງທະນີສີ່ຂາທັງຫຼາຍເຫຼົ່ານີ້ເຕັມໄປດ້ວຍຄວາມໂກດຮ້າຍ ແລະ ພວກເຂົາພາກັນຕໍ່ສູ້ກັບພຣະເຈົ້າດ້ວຍອາວຸດຍຸກຫີນສະໄໝໂບຮານໃນມືຂອງພວກເຂົາ, ພະຍາຍາມເລີ່ມການຕໍ່ສູ້ຂອງມະນຸດທະນີປະເພດທີ່ໂລກບໍ່ເຄີຍເຫັນມາກ່ອນ, ຈັດການຕໍ່ສູ້ຂອງຍຸກສຸດທ້າຍລະຫວ່າງມະນຸດທະນີ ແລະ ພຣະເຈົ້າເຊິ່ງຈະມີຊື່ສຽງກ້ອງດັງໄປທົ່ວດິນແດນ. ຍິ່ງໄປກວ່ານັ້ນມະນຸດທະນີໂບຮານທັງຫຼາຍທີ່ຢືນໄດ້ເຄິ່ງໜຶ່ງເຫຼົ່ານີ້ແມ່ນເຕັມໄປດ້ວຍຄວາມເພິ່ງພໍໃຈໃນຕົນເອງ. ຜົມຂອງພວກເຂົາທີ່ປົກປິດໜ້າຕາຂອງພວກເຂົາກໍເກາະກັນເປັນຫຍ້ອງໆ, ເຕັມໄປດ້ວຍເຈດຕະນາທີ່ໂຫດຮ້າຍ ແລະ ພວກເຂົາຍົກຂາໜ້າຂອງພວກເຂົາຂຶ້ນ. ພວກເຂົາຍັງບໍ່ໄດ້ວິວັດທະນາການກາຍເປັນມະນຸດສະໄໝໃໝ່ຢ່າງສົມບູນ, ສະນັ້ນ ບາງເທື່ອ ພວກເຂົາກໍຢືນສອງຂາ ແລະ ບາງເທື່ອ ພວກເຂົາກໍຄານ, ເມັດເຫື່ອຍ້ອຍປົກຄຸມໜ້າຜາກຂອງພວກເຂົາຄືກັບຢົດນໍ້າຄ້າງທີ່ອັດຍັດເຂົ້າກັນ, ຄວາມກະຕືລືລົ້ນຂອງພວກເຂົາແມ່ນຊັດແຈ້ງໃນຕົວມັນເອງ. ເມື່ອຫຼຽວເບິ່ງມະນຸດທະນີທີ່ເກົ່າແກ່ ແລະ ໂບຮານ, ເພື່ອນຂອງພວກເຂົາ ທີ່ຢືນດ້ວຍຂາທັງສີ່ ໂດຍທີ່ຂາທັງສີ່ນັ້ນໃຫຍ່ ແລະ ຊ້າ ແມ່ນເກືອບຈະບໍ່ສາມາດປັດປ້ອງການໂຈມຕີ ແລະ ປາສະຈາກກຳລັງໃນການຕໍ່ສູ້, ພວກເຂົາເກືອບບໍ່ສາມາດຢັບຢັ້ງຕົນເອງໄດ້. ພາຍໃນຊົ່ວພິບຕາ, ກ່ອນທີ່ຈະມີເວລາໃຫ້ເຫັນສິ່ງທີ່ເກີດຂຶ້ນ, “ວິລະບຸລຸດ” ທີ່ຢູ່ໃນເວທີມວຍກໍລົ້ມລົງພື້ນ ໂດຍທີ່ຂາຊີ້ຂຶ້ນຟ້າ. ຂາເຫຼົ່ານັ້ນທີ່ຕັ້ງທ່ານຢ່າງບໍ່ຖືກຕ້ອງຢູ່ເທິງພື້ນດິນຢ່າງຜິດໆເປັນເວລາຫຼາຍປີກໍປີ້ນຢ່າງກະທັນຫັນ ແລະ ມະນຸດທະນີກໍບໍ່ມີຄວາມປາຖະໜາທີ່ຈະຕໍ່ຕ້ານອີກຕໍ່ໄປ. ຈາກເວລານັ້ນເປັນຕົ້ນໄປ, ມະນຸດທະນີທີ່ໂບຮານທີ່ສຸດກໍຖືກກຳຈັດອອກຈາກໜ້າໂລກ, ມັນ “ເສົ້າໃຈ” ແທ້ໆ. ມະນຸດທະນີໂບຮານນີ້ໄດ້ມາເຖິງຈຸດຈົບຢ່າງກະທັນຫັນ. ເປັນຫຍັງມັນຈຶ່ງຟ້າວໄປຈາກໂລກທີ່

ມະຫັດສະຈັນຂອງມະນຸດຢ່າງໄວວາແທ້? ເປັນຫຍັງມັນຈຶ່ງບໍ່ສົນທະນາກ່ຽວກັບຂັ້ນຕອນຕໍ່ໄປຂອງຍຸດທະສາດກັບເພື່ອນຂອງມັນ? ເປັນຕາເສຍດາຍທີ່ມັນຕ້ອງອຳລາໂລກໂດຍບໍ່ໄດ້ປະຄວາມລັບໃນການວັດແທກກຳລັງຂອງມະນຸດກັບພຣະເຈົ້າໄວ້! ມັນຊ່າງບໍ່ຄິດເລີຍທີ່ມະນຸດທະນິເຖົ້າຕ້ອງຕາຍໂດຍບໍ່ໄດ້ກະຊິບ, ບໍ່ສັ່ງຕໍ່ "ວັດທະນະທຳ ແລະ ສິລະປະໂບຮານ" ໃຫ້ກັບເຊື້ອສາຍຂອງມັນ. ບໍ່ມີເວລາໃຫ້ມັນເອີ້ນໂຕທີ່ຢູ່ໃກ້ຊິດກັບມັນທີ່ສຸດໃຫ້ມາຢູ່ຂ້າງໆເພື່ອບອກພວກມັນເຖິງຄວາມຮັກຂອງມັນ, ມັນບໍ່ຈາລຶກຂໍ້ຄວາມໄວ້ເທິງແຜ່ນຫີນ, ມັນບໍ່ໄດ້ສັງເກດດວງຕາເວັນຈາກສະຫວັນ ແລະ ບໍ່ໄດ້ເວົ້າເຖິງຄວາມແສນຍາກລຳບາກນັ້ນເລີຍ. ເມື່ອມັນຫາຍໃຈເປັນຄັ້ງສຸດທ້າຍ, ມັນກໍບໍ່ໄດ້ເອີ້ນໃຫ້ເຊື້ອສາຍຂອງມັນມາຢູ່ທາງຂ້າງຮ່າງກາຍທີ່ກຳລັງຈະຕາຍເພື່ອບອກພວກມັນວ່າ "ຢ່າປີນຂຶ້ນໄປໃນເວທີມວຍເພື່ອທ້າທາຍພຣະເຈົ້າ" ກ່ອນທີ່ມັນຈະຫຼັບຕາຂອງມັນລົງ ໂດຍທີ່ຂາທັງສີ່ຊີ້ຂຶ້ນເທິງຄືກັບງ່າໄມ້ທີ່ຊີ້ຂຶ້ນສູ່ທ້ອງຟ້າຕະຫຼອດໄປ. ເບິ່ງຄືກັບວ່າມັນຕາຍຢ່າງຂົມຂື່ນ... ທັນໃດນັ້ນ ສຽງຮ້ອງດັງກ້ອງອອກມາຈາກຂ້າງລຸ່ມເວທີມວຍ; ມະນຸດທະນິໂຕໜຶ່ງທີ່ຢືນໄດ້ເຄິ່ງໜຶ່ງກໍຢູ່ທາງຂ້າງຕົວມັນເອງ; ຖື "ໄມ້ຄ້ອນຫີນ" ເພື່ອລ່າເຍືອງ ຫຼື ສັດປ່າອື່ນໆທີ່ຖືກຈັບກິນເປັນອາຫານທີ່ກ້າວໜ້າຫຼາຍກວ່າມະນຸດທະນິໂຕເກົ່າ, ມັນໂດດເຂົ້າສູ່ເວທີມວຍ, ເຕັມໄປດ້ວຍຄວາມໂມໂຫ ໂດຍມີແຜນການຢ່າງຮອບຄອບຢູ່ໃນຄວາມຄິດຂອງມັນ[6]. ຄືກັບວ່າ ມັນໄດ້ເຮັດບາງສິ່ງທີ່ສົມຄວນໄດ້ຮັບການສັນລະເສີນ. ເມື່ອໄດ້ໃຊ້ "ກຳລັງ" ຂອງໄມ້ຄ້ອນຫີນຂອງມະນຸດ ມັນກໍສາມາດຢືນສອງຂາໄດ້ "ສາມນາທີ". "ກຳລັງ" ຂອງ "ຂາ" ທີສາມນີ້ແມ່ນຊ່າງຍິ່ງໃຫຍ່ແທ້ເດ! ມັນເຮັດໃຫ້ມະນຸດທະນິໃຫຍ່, ເຊື່ອຊ້າ, ໂງ່ຈ້າທີ່ຢືນໄດ້ເຄິ່ງໜຶ່ງເປັນເວລາສາມນາທີ, ບໍ່ແປກໃຈເລີຍວ່າມະນຸດທະນິເຖົ້າທີ່ເປັນຕານັບຖືນີ້[7] ຈຶ່ງມັກຂົ່ມຂູ່ຫຼາຍ. ແລ້ວກໍເປັນເຊັ່ນນັ້ນ ຫີນໂບຮານນຳໃຊ້ "ກໍເປັນໄປຕາມຊື່ສຽງຂອງມັນ": ມີດ້າມ, ຄົມ ແລະ ປາຍຂອງມີດ, ຂໍ້ບົກຜ່ອງດຽວກໍຄືການຂາດແສງເຫຼື້ອມແວວວາວໃນຄົມ, ສິ່ງນັ້ນຊ່າງເປັນຕາໂສກເສົ້າແທ້ເດ. ຈົ່ງເບິ່ງ "ວິລະບຸລຸດ" ແຫ່ງໂບຮານອີກຄັ້ງ ເຊິ່ງກຳລັງຢືນຢູ່ໃນເວທີມວຍ ໂດຍຫຼຽວເບິ່ງຄົນທີ່ຢູ່ຂ້າງລຸ່ມດ້ວຍສາຍຕາທີ່ດູຖູກ, ຄືກັບວ່າພວກເຂົາເປັນຄົນຕໍ່າຕ້ອຍທີ່ຂາດຄວາມສາມາດ ແລະ ເບິ່ງຕົນເອງຄືກັບວ່າ ເປັນວິລະບຸລຸດທີ່ສະຫງ່າງາມ. ໃນຫົວໃຈຂອງມັນ, ມັນກຽດຊັງຄົນທີ່ຢູ່ຕໍ່ໜ້າເວທີຢ່າງລັບໆ. "ປະເທດຊາດກຳລັງຢູ່ໃນຄວາມປັ່ນປ່ວນ ແລະ ພວກເຮົາແຕ່ລະຄົນມີຄວາມຮັບຜິດຊອບ, ເປັນຫຍັງພວກເຈົ້າຈຶ່ງຫຼົບຫຼີກ? ເປັນຍ້ອນວ່າພວກເຈົ້າໄດ້ເຫັນປະເທດຊາດກຳລັງຜະເຊີນກັບໄພພິບັດ, ແຕ່ຈະບໍ່ຂໍມີສ່ວນຮ່ວມໃນການສູ້ຮົບຢ່າງນອງເລືອດບໍ? ປະເທດຊາດຢູ່ໃນຂອບຂອງໄພພິບັດ, ເປັນຫຍັງພວກເຈົ້າຈຶ່ງບໍ່ສະແດງຄວາມກັງວົນເປັນສິ່ງທຳອິດ ແລະ ມີຄວາມສຸກກັບຕົນເອງເປັນສິ່ງສຸດທ້າຍ? ພວກເຈົ້າຈະສາມາດຢືນເບິ່ງປະເທດຊາດລົ້ມຈົມ ແລະ ປະຊາຊົນພາຍໃນປະເທດຕົກລົງສູ່ຄວາມເສື່ອມໂຊມໄດ້

6 "ໂດຍມີແຜນການຢ່າງຮອບຄອບຢູ່ໃນຄວາມຄິດຂອງມັນ" ແມ່ນເວົ້າເພື່ອເຍາະເຍີ້ຍ ແລະ ສິ່ງນີ້ໝາຍເຖິງວິທີທີ່ຜູ້ຄົນບໍ່ຮູ້ຈັກຕົນເອງ ແລະ ບໍ່ຮູ້ຈັກວຸດທິພາວະທີ່ແທ້ຈິງຂອງພວກເຂົາ. ນີ້ແມ່ນຄຳເວົ້າເພື່ອດູຖູກ.

7 "ເປັນຕານັບຖື" ແມ່ນເວົ້າເພື່ອເຍາະເຍີ້ຍ.

ແນວໃດ? ພວກເຈົ້າເຕັມໃຈທີ່ຈະແບກຄວາມອັບອາຍແຫ່ງການປາບປາມລະດັບຊາດບໍ? ຊ່າງເປັນພວກທີ່ບໍ່ມີຫຍັງດີເລີຍ!" ຍ້ອນມັນຄິດແບບນີ້, ການຕົບຕີກັນຈຶ່ງເກີດຂຶ້ນຢູ່ໜ້າເວທີ ແລະ ສາຍຕາຂອງມັນກໍເລີ່ມໃຈຮ້າຍຫຼາຍຂຶ້ນ, ຄືກັບວ່າມັນກຳລັງຈະຍິງ[8] ແປວໄຟ. ມັນປາຖະໜາເພື່ອໃຫ້ພຣະເຈົ້າລົ້ມເຫຼວກ່ອນການຕໍ່ສູ້, ຕ້ອງການຢ່າງໃຫຍ່ທີ່ຈະໃຫ້ພຣະເຈົ້າຕາຍເພື່ອເຮັດໃຫ້ຜູ້ຄົນມີຄວາມສຸກ. ແຕ່ມັນຮູ້ໜ້ອຍເກີນໄປ ເຖິງແມ່ນການນຳໃຊ້ຫີນຂອງມັນແມ່ນມີຊື່ສຽງທີ່ສົມຄວນໄດ້ຮັບ, ມັນກໍບໍ່ສາມາດເຮັດໃຫ້ພຣະເຈົ້າໃຈຮ້າຍຈັກເທື່ອ. ກ່ອນມັນຈະມີເວລາປ້ອງກັນຕົນເອງ, ກ່ອນມັນຈະມີເວລານອນລົງ ແລະ ຢືນດ້ວຍຕີນຂອງມັນ, ມັນກໍເຊຊ້າຍເຊຂວາ, ຕາສອງເບື້ອງຂອງມັນກໍມືດມົວໄປໝົດ. ມັນລົ້ມລົງສູ່ບັນພະບຸລຸດທີ່ເກົ່າແກ່ຂອງມັນ ແລະ ບໍ່ລຸກຂຶ້ນອີກເລີຍ; ຈັບມະນຸດທະນີໂບຮານຢ່າງໜຽວແໜ້ນ, ມັນບໍ່ຮ້ອງຂຶ້ນອີກຕໍ່ໄປ ແລະ ຮັບຮູ້ຄວາມດ້ອຍກວ່າຂອງມັນ, ບໍ່ມີຄວາມປາຖະໜາທີ່ຈະຕໍ່ຕ້ານອີກຕໍ່ໄປ. ມະນຸດທະນີສອງໂຕທີ່ເປັນຕາສົງສານນັ້ນກໍຕາຍຕໍ່ໜ້າເວທີມວຍ. ມັນຊ່າງໂຊກຮ້າຍທີ່ບັນພະບຸລຸດຂອງມະນຸດຊາດ ຜູ້ທີ່ຢູ່ລອດຈົນເຖິງປັດຈຸບັນ ໄດ້ຕາຍຢ່າງໄຮ້ດຽງສາໃນມື້ທີ່ດວງຕາເວັນແຫ່ງຄວາມຊອບທຳໄດ້ປະກົດຂຶ້ນ! ມັນຊ່າງໂງ່ຈ້າທີ່ພວກເຂົາປ່ອຍໃຫ້ພອນທີ່ຍິ່ງໃຫຍ່ດັ່ງກ່າວຜ່ານພວກເຂົາໄປ, ເຊິ່ງໃນມື້ແຫ່ງ ພອນຂອງພວກເຂົາ, ມະນຸດທະນີທີ່ໄດ້ລໍຖ້າເປັນເວລາຫຼາຍພັນປີໄດ້ນຳເອົາພອນລົງໄປສູ່ແດນມໍລະນາເພື່ອ "ມີຄວາມສຸກ" ຮ່ວມກັບກະສັດຂອງມານຮ້າຍ! ເປັນຫຍັງຈຶ່ງບໍ່ຮັກສາພອນເຫຼົ່ານີ້ຢູ່ໂລກແຫ່ງຊີວິດເພື່ອມີຄວາມສຸກກັບລູກຊາຍ ແລະ ລູກສາວຂອງພວກເຂົາ? ພວກເຂົາພຽງແຕ່ຮຽກຮ້ອງເອົາບັນຫາ! ມັນຊ່າງເປັນຕາເສຍດາຍແທ້ເດ, ຍ້ອນເຫັນແກ່ສະຖານະທີ່ເລັກນ້ອຍ, ຊື່ສຽງ ແລະ ຄວາມທະນົງຕົວ, ພວກເຂົາທົນທຸກກັບຄວາມໂຊກຮ້າຍຂອງການຖືກຂ້າ, ປີນໄຕ່ຂຶ້ນໄປເພື່ອເປີດປະຕູນະຮົກ ແລະ ກາຍເປັນລູກຊາຍຂອງມັນ. ລາຄາດັ່ງກ່າວແມ່ນບໍ່ຈຳເປັນ. ຊ່າງເປັນບັນພະບຸລຸດເຖົ້າແກ່ທີ່ໜ້າສົງສານແທ້ໆ ຜູ້ເຊິ່ງ "ເຕັມໄປດ້ວຍຈິດວິນຍານແຫ່ງຊາດ" ສາມາດ "ເຄັ່ງຄັດກັບຕົນເອງ ແຕ່ອົດກັ້ນກັບຄົນອື່ນ" ກັກຂັງພວກເຂົາໄວ້ໃນນະຮົກ ແລະ ປ່ອຍໃຫ້ຄົນຕໍ່າຕ້ອຍກວ່າໄວ້ດ້ານນອກ. "ຕົວແທນຂອງຜູ້ຄົນ" ແບບນີ້ຈະສາມາດຄົ້ນພົບໄດ້ຢູ່ໃສ? ເພື່ອເຫັນແກ່ "ຄວາມເປັນຢູ່ທີ່ດີຂອງລູກຫຼານຂອງພວກເຂົາ" ແລະ "ຊີວິດທີ່ສະຫງົບສຸກແຫ່ງລຸ້ນອະນາຄົດ", ພວກເຂົາບໍ່ຍອມໃຫ້ພຣະເຈົ້າແຊກແຊງ ແລະ ດ້ວຍເຫດນັ້ນ ພວກເຂົາບໍ່ໃສ່ໃຈຊີວິດຂອງພວກເຂົາເອງ. ພວກເຂົາອຸທິດຕົນເອງໃຫ້ກັບ "ຜົນປະໂຫຍດຂອງຊາດ" ໂດຍທັງສິ້ນ, ເຂົ້າສູ່ດິນແດນມໍລະນາໂດຍບໍ່ເວົ້າຫຍັງເລີຍ. ຊາດນິຍົມແບບດັ່ງກ່າວຈະຄົ້ນພົບໄດ້ຢູ່ໃສ? ເມື່ອຕໍ່ສູ້ກັບພຣະເຈົ້າ, ພວກເຂົາບໍ່ຢ້ານທີ່ຈະຕາຍ ຫຼື ບໍ່ຢ້ານເລືອດອອກ, ແຮງໄກທີ່ພວກເຂົາຈະກັງວົນກ່ຽວກັບມື້ອື່ນ. ພວກເຂົາພຽງແຕ່ເລີ່ມເຂົ້າສູ່ສະໜາມຮົບ. ຊ່າງເປັນຕາເສຍດາຍທີ່ສິ່ງດຽວທີ່ພວກເຂົາໄດ້ຮັບສຳລັບ "ວິນຍານແຫ່ງການອຸທິດ" ຂອງພວກເຂົາແມ່ນຄວາມເສຍໃຈຊົ່ວນິດນິລັນ ແລະ ຖືກກືນກິນດ້ວຍແປວໄຟຈາກນະຮົກທີ່ເຜົາໄໝ້ຢູ່ຕະຫຼອດ!

8 "ຍິງ" ບົ່ງບອກເຖິງສະພາວະຂີ້ຮ້າຍຂອງຜູ້ຄົນທີ່ໃຈຮ້າຍຍ້ອນຄວາມໂມໂຫ ເມື່ອພວກເຂົາຖືກພຣະເຈົ້າເອົາຊະນະ. ມັນບົ່ງບອກເຖິງຂອບເຂດການຕໍ່ຕ້ານພຣະເຈົ້າຂອງພວກເຂົາ.

ຊ່າງເປັນຕາສົນໃຈແທ້ເດ! ເປັນຫຍັງການບັງເກີດເປັນມະນຸດຂອງພຣະເຈົ້າຈຶ່ງຖືກຜູ້ຄົນປະຕິເສດ ແລະ ປະນາມຢູ່ສະເໝີ? ເປັນຫຍັງຜູ້ຄົນຈຶ່ງບໍ່ມີຄວາມເຂົ້າໃຈກ່ຽວກັບການບັງເກີດເປັນມະນຸດຂອງພຣະເຈົ້າຈັກເທື່ອ? ເປັນໄປໄດ້ບໍວ່າພຣະເຈົ້າໄດ້ມາຜິດເວລາ? ເປັນໄປໄດ້ບໍວ່າພຣະເຈົ້າໄດ້ມາຜິດບ່ອນ? ເປັນໄປໄດ້ບໍ່ວ່າສິ່ງນີ້ເກີດຂຶ້ນຍ້ອນພຣະເຈົ້າໄດ້ປະຕິບັດພຽງຄົນດຽວ, ໂດຍບໍ່ມີ "ລາຍເຊັນຮອງຮັບ" ຂອງມະນຸດ? ເປັນຍ້ອນພຣະເຈົ້າໄດ້ຕັດສິນໃຈດ້ວຍຕົວພຣະອົງເອງໂດຍບໍ່ມີການອະນຸຍາດຈາກມະນຸດ? ຄວາມຈິງລະບຸວ່າ ພຣະເຈົ້າບໍ່ໄດ້ແຈ້ງການລ່ວງໜ້າ. ພຣະເຈົ້າບໍ່ໄດ້ເຮັດຫຍັງຜິດໃນການກາຍມາເປັນເນື້ອໜັງ, ພຣະອົງຈຳເປັນຕ້ອງຂໍຄວາມຍິນຍອມຈາກມະນຸດບໍ? ຍິ່ງໄປກວ່ານັ້ນ ພຣະເຈົ້າເຕືອນມະນຸດຕັ້ງແຕ່ດົນແລ້ວ, ບາງເທື່ອ ມະນຸດໄດ້ລືມໄປແລ້ວ. ໂທດພວກເຂົາບໍ່ໄດ້ ຍ້ອນມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມຕັ້ງແຕ່ດົນແລ້ວ ຈົນເຂົາບໍ່ສາມາດເຂົ້າໃຈຫຍັງກ່ຽວກັບສິ່ງທີ່ເກີດຂຶ້ນຢູ່ລຸ່ມສະຫວັນ ແລະ ບໍ່ສາມາດເວົ້າຫຍັງກ່ຽວກັບເຫດການທີ່ເກີດຂຶ້ນໃນໂລກຝ່າຍວິນຍານ! ມັນຊ່າງເປັນຕາອັບອາຍທີ່ບັນພະບຸລຸດຂອງມະນຸດ ນັ້ນກໍຄື ມະນຸດທະນີ ໄດ້ຕາຍເທິງເວທີມວຍ, ແຕ່ສິ່ງນີ້ກໍບໍ່ແປກໃຈເລີຍ: ສະຫວັນ ແລະ ແຜ່ນດິນໂລກບໍ່ສາມາດເຂົ້າກັນໄດ້ຈັກເທື່ອ ແລ້ວມະນຸດທະນີ ທີ່ມີຈິດໃຈທີ່ສ້າງດ້ວຍຫີນ ຈະສາມາດຄິດໄດ້ແນວໃດວ່າພຣະເຈົ້າຈະກາຍມາເປັນເນື້ອໜັງອີກຄັ້ງ? ຊ່າງເປັນເລື່ອງເສົ້າໃຈທີ່ "ມະນຸດເຖົ້າ" ເຊັ່ນນີ້ ຜູ້ທີ່ມີ "ອາຍຸຫົກສິບປີ" ຈະຕາຍໃນມື້ທີ່ພຣະເຈົ້າປາກົດຕົວ. ມັນບໍ່ແມ່ນສິ່ງທີ່ໜ້າອັດສະຈັນບໍທີ່ມັນຈາກໂລກໄປ ໂດຍບໍ່ໄດ້ຮັບພອນໃນມື້ແຫ່ງພອນທີ່ຍິ່ງໃຫຍ່ດັ່ງກ່າວ? ການບັງເກີດເປັນມະນຸດຂອງພຣະເຈົ້າໄດ້ສົ່ງຄື້ນກະແທກທົ່ວທຸກສາສະໜາ ແລະ ທຸກຂອບເຂດ, ມັນໄດ້ "ໂຍນຄວາມບໍ່ເປັນລະບຽບ" ໃຫ້ກັບຖັນແຖວດັ່ງເດີມຂອງວົງການສາສະໜາ ແລະ ມັນໄດ້ສັ່ນຄອນຫົວໃຈຂອງທຸກຄົນທີ່ປາຖະໜາການປາກົດຕົວຂອງພຣະເຈົ້າ. ຜູ້ໃດບໍ່ເປັນຕາເຄົາລົບແດ່? ຜູ້ໃດບໍ່ປາຖະໜາທີ່ຈະເຫັນພຣະເຈົ້າແດ່? ພຣະເຈົ້າໄດ້ຢູ່ທ່າມກາງມະນຸດເປັນການສ່ວນຕົວເປັນເວລາຫຼາຍປີ, ແຕ່ມະນຸດບໍ່ເຄີຍຮູ້ເຖິງສິ່ງນີ້ຈັກເທື່ອ. ໃນປັດຈຸບັນ ພຣະເຈົ້າເອງໄດ້ປາກົດຕົວ ແລະ ສະແດງຕົວຕົນຂອງພຣະອົງສູ່ສາທາລະນະຊົນ, ສິ່ງນີ້ຈະບໍ່ນຳເອົາຄວາມເບີກບານມາສູ່ຫົວໃຈຂອງມະນຸດໄດ້ແນວໃດ? ພຣະເຈົ້າເຄີຍແບ່ງປັນຄວາມສຸກ ແລະ ຄວາມທຸກກັບມະນຸດ ແລະ ໃນປັດຈຸບັນ ພຣະອົງໄດ້ຮ່ວມກັບມະນຸດຊາດຄືນໃໝ່ ແລະ ແບ່ງປັນເລື່ອງລາວໃນອະດີດຮ່ວມກັບເຂົາ. ຫຼັງຈາກທີ່ພຣະອົງຍ່າງອອກຈາກຢູດາຍ ຜູ້ຄົນກໍບໍ່ສາມາດພົບຮ່ອງຮອຍຂອງພຣະອົງໄດ້. ພວກເຂົາປາຖະໜາທີ່ຈະພົບກັບພຣະເຈົ້າອີກຄັ້ງ, ໂດຍບໍ່ຮູ້ແມ່ນແຕ່ໜ້ອຍດຽວວ່າ ໃນປັດຈຸບັນນີ້ ພວກເຂົາໄດ້ພົບກັບພຣະອົງອີກຄັ້ງແລ້ວ ແລະ ໄດ້ຮ່ວມກັບພຣະອົງຄືນໃໝ່ແລ້ວ. ສິ່ງນີ້ບໍ່ກະຕຸ້ນຄວາມຄິດຂອງມື້ວານໄດ້ແນວໃດ? ສອງພັນປີກ່ອນໜ້ານີ້ ຊີໂມນ ບາໂຢນາ ທີ່ເປັນເຊື້ອສາຍຂອງຊາວຢິວໄດ້ເຫັນພຣະເຢຊູພຣະຜູ້ຊ່ວຍໃຫ້ພົ້ນ, ກິນເຂົ້າຮ່ວມໂຕະດຽວກັນກັບພຣະອົງ ແລະ ຫຼັງຈາກທີ່ໄດ້ຕິດຕາມພຣະອົງເປັນເວລາຫຼາຍປີ ລາວກໍຮູ້ສຶກຮັກພຣະອົງຢ່າງເລິກເຊິ່ງ: ລາວຮັກພຣະອົງຈາກກົ້ນເລິກໃນຫົວໃຈຂອງລາວ; ລາວຮັກພຣະເຢຊູເຈົ້າຢ່າງເລິກເຊິ່ງ. ຊາວຢິວບໍ່ຮູ້ຫຍັງເລີຍກ່ຽວກັບເດັກນ້ອຍຜົມສີທອງນີ້ ທີ່ເກີດຢູ່ໃນຮາງຫຍ້າທີ່ເຕັມໄປດ້ວຍຄວາມເຢືອກເຢັນຄືຮູບລັກສະນະທຳອິດຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ພວກເຂົາທຸກຄົນ

ຄິດວ່າພຣະອົງແມ່ນຄືກັນກັບພວກເຂົາ, ບໍ່ມີຜູ້ໃດຄິດແຕກຕ່າງກ່ຽວກັບພຣະອົງ, ແລ້ວຜູ້ຄົນຈະຮັບຮູ້ພຣະເຢຊູທີ່ເປັນຄົນທຳມະດາ ແລະ ປົກກະຕິນີ້ໄດ້ແນວໃດ? ຊາວຢິວຄິດວ່າພຣະອົງເປັນພຽງບຸດຂອງຢິວໃນເວລານັ້ນ. ບໍ່ມີໃຜເບິ່ງພຣະອົງເປັນພຣະເຈົ້າທີ່ສະຫງ່າງາມ ແລະ ຜູ້ຄົນໄດ້ແຕ່ຮຽກຮ້ອງຈາກພຣະອົງຢ່າງຫຼັບຫູຫຼັບຕາ, ຂໍໃຫ້ພຣະອົງມອບຄວາມກະລຸນາ ແລະ ສັນຕິສຸກ ແລະ ຄວາມປິຕິຍິນດີທີ່ອຸດົມສົມບູນ ແລະ ຫຼວງຫຼາຍໃຫ້ກັບພວກເຂົາ. ພວກເຂົາຮູ້ພຽງແຕ່ວ່າ ພຣະອົງມີທຸກສິ່ງຄືກັບເສດຖີເງິນລ້ານທີ່ຄົນໆໜຶ່ງປາຖະໜາ. ແຕ່ຜູ້ຄົນກໍບໍ່ເຄີຍປະຕິບັດຕໍ່ພຣະອົງດັ່ງຜູ້ເປັນທີ່ຮັກ; ຜູ້ຄົນໃນເວລານັ້ນບໍ່ໄດ້ຮັກພຣະອົງ ແລະ ມີແຕ່ຕໍ່ຕ້ານພຣະອົງ ແລະ ຮຽກຮ້ອງຈາກພຣະອົງໂດຍບໍ່ສົມເຫດສົມຜົນ. ພຣະອົງກໍບໍ່ເຄີຍຂັດຂືນຈັກເທື່ອ, ແຕ່ມອບຄວາມກະລຸນາໃຫ້ກັບມະນຸດຢ່າງສະໝໍ່າສະເໝີ, ເຖິງແມ່ນມະນຸດບໍ່ໄດ້ຮູ້ຈັກພຣະອົງກໍຕາມ. ພຣະອົງບໍ່ໄດ້ເຮັດສິ່ງໃດ ນອກຈາກມອບຄວາມອົບອຸ່ນ, ຄວາມຮັກ ແລະ ຄວາມເມດຕາໃຫ້ກັບມະນຸດຢ່າງງຽບໆ ແລະ ຍິ່ງໄປກວ່ານັ້ນ ພຣະອົງມອບວິທີປະຕິບັດໃໝ່ໃຫ້ກັບມະນຸດ, ນຳພາມະນຸດໃຫ້ອອກຈາກຄວາມຜູກມັດຂອງກົດໝາຍ. ມະນຸດບໍ່ຮັກພຣະອົງ, ເຂົາພຽງແຕ່ອິດສາພຣະອົງ ແລະ ພຽງແຕ່ຮູ້ຈັກພອນສະຫວັນພິເສດຂອງພຣະອົງ. ມະນຸດຊາດທີ່ຕາບອດຈະສາມາດຮູ້ຈັກໄດ້ແນວໃດວ່າ ພຣະເຢຊູພຣະຜູ້ຊ່ວຍໃຫ້ພົ້ນອັນເປັນທີ່ຮັກຕ້ອງທົນທຸກກັບຄວາມອັບອາຍຫຼາຍສໍ່າໃດ ໃນຕອນທີ່ພຣະອົງໄດ້ມາຢູ່ທ່າມກາງມະນຸດຊາດ? ບໍ່ມີໃຜຄຳນຶງເຖິງຄວາມເຈັບປວດຂອງພຣະອົງ, ບໍ່ມີໃຜຮູ້ຈັກຄວາມຮັກຂອງພຣະອົງສຳລັບພຣະເຈົ້າພຣະບິດາ ແລະ ບໍ່ມີໃຜສາມາດຮູ້ຈັກເຖິງຄວາມໂດດດ່ຽວຂອງພຣະອົງ; ເຖິງແມ່ນມາຣີອາເປັນມານດາທີ່ໃຫ້ກຳເນີດກັບພຣະອົງ, ນາງຈະສາມາດຮູ້ຈັກຄວາມຄິດທີ່ຢູ່ໃນຫົວໃຈຂອງພຣະເຢຊູເຈົ້າຜູ້ມີເມດຕາໄດ້ແນວໃດ? ມີໃຜແດ່ທີ່ຮູ້ຈັກຄວາມທົນທຸກທີ່ບໍ່ສາມາດບັນຍາຍໄດ້ຂອງບຸດມະນຸດ? ຫຼັງຈາກທີ່ຮຽກຮ້ອງຈາກພຣະອົງ, ຜູ້ຄົນໃນເວລານັ້ນກໍປະພຣະອົງໄວ້ດ້ານຫຼັງແນວຄິດຂອງພວກເຂົາຢ່າງເຢືອກເຢັນ ແລະ ໂຍນພຣະອົງໄວ້ຂ້າງນອກ. ສະນັ້ນພຣະອົງຈຶ່ງໄດ້ພະເນຈອນຕາມທ້ອງຖະໜົນ ມື້ແລ້ວມື້ເລົ່າ, ປີແລ້ວປີເລົ່າ, ພະເນຈອນໄປມາເປັນເວລາຫຼາຍປີຈົນພຣະອົງໄດ້ດຳລົງຊີວິດຢູ່ເປັນເວລາສາມສິບສາມປີຢ່າງລຳບາກ ເຊິ່ງເປັນປີທີ່ທັງດົນ ແລະ ສັ້ນ. ເມື່ອຜູ້ຄົນຕ້ອງການພຣະອົງ, ພວກເຂົາກໍຊັກຊວນພຣະອົງເຂົ້າໄປໃນເຮືອນຂອງພວກເຂົາດ້ວຍໃບໜ້າທີ່ຍິ້ມແຍ້ມ, ພະຍາຍາມຮຽກຮ້ອງຈາກພຣະອົງ ແລະ ຫຼັງຈາກທີ່ພຣະອົງປະທານໃຫ້ກັບພວກເຂົາ, ພວກເຂົາກໍໄລ່ພຣະອົງອອກຈາກປະຕູທັນທີ. ຜູ້ຄົນກິນສິ່ງທີ່ປາກຂອງພຣະອົງສະໜອງໃຫ້, ພວກເຂົາດື່ມເລືອດຂອງພຣະອົງ, ພວກເຂົາໄດ້ຮັບຄວາມກະລຸນາທີ່ພຣະອົງປະທານໃຫ້ກັບພວກເຂົາ, ແຕ່ພວກເຂົາກໍຍັງຕໍ່ຕ້ານພຣະອົງ ຍ້ອນພວກເຂົາບໍ່ເຄີຍຮູ້ຈັກວ່າຜູ້ໃດໄດ້ມອບຊີວິດໃຫ້ກັບພວກເຂົາ. ໃນທີ່ສຸດແລ້ວ ພວກເຂົາກໍຄຶງພຣະອົງເທິງໄມ້ກາງແຂນ, ແຕ່ພຣະອົງກໍຍັງບໍ່ໄດ້ຈົ່ມວ່າຫຍັງ. ແມ່ນແຕ່ໃນປັດຈຸບັນ ພຣະອົງກໍຍັງຢູ່ແບບງຽບໆ. ຜູ້ຄົນກິນເນື້ອໜັງຂອງພຣະອົງ, ພວກເຂົາດື່ມເລືອດຂອງພຣະອົງ, ພວກເຂົາກິນອາຫານທີ່ພຣະອົງປຸງແຕ່ງໃຫ້ກັບພວກເຂົາ ແລະ ພວກເຂົາຍ່າງໃນເສັ້ນທາງທີ່ພຣະອົງໄດ້ເປີດອອກໃຫ້ກັບພວກເຂົາ ແຕ່ພວກເຂົາກໍຍັງຕັ້ງໃຈທີ່ຈະປະຕິເສດພຣະອົງ; ຄວາມຈິງແລ້ວ ພວກເຂົາປະຕິບັດຕໍ່ພຣະເຈົ້າທີ່ໄດ້ມອບຊີວິດໃຫ້ກັບພວກເຂົາຄືກັບ

ສັດຕູ ແລະ ກົງກັນຂ້າມ ພວກເຂົາປະຕິບັດຕໍ່ຄົນທີ່ເປັນທາດຄືກັບພວກເຂົາເໝືອນດັ່ງພຣະບິດາໃນສະຫວັນ. ໃນສິ່ງນີ້, ພວກເຂົາບໍ່ໄດ້ຕັ້ງໃຈຕໍ່ຕ້ານພຣະອົງບໍ? ພຣະເຢຊູມາຕາຍຢູ່ເທິງໄມ້ກາງແຂນໄດ້ແນວໃດ? ພວກເຈົ້າຮູ້ບໍ? ພຣະອົງບໍ່ໄດ້ຖືກທໍລະຍົດໂດຍຊາວຢູດາບໍ ຜູ້ທີ່ໃກ້ຊິດກັບພຣະອົງຫຼາຍທີ່ສຸດ ແລະ ໄດ້ກິນພຣະອົງ, ໄດ້ດື່ມພຣະອົງ ແລະ ໄດ້ມີຄວາມສຸກກັບພຣະອົງ? ຢູດາບໍ່ໄດ້ທໍລະຍົດພຣະເຢຊູຍ້ອນພຣະອົງເປັນພຽງອາຈານທຳມະດາທີ່ບໍ່ສຳຄັນບໍ? ຖ້າຜູ້ຄົນໄດ້ເຫັນຢ່າງແທ້ຈິງວ່າພຣະເຢຊູພິເສດ ແລະ ເປັນຜູ້ທີ່ມາຈາກສະຫວັນ, ພວກເຂົາຈະຄຶງພຣະອົງທັງເປັນເທິງໄມ້ກາງແຂນເປັນເວລາຊາວສີ່ຊົ່ວໂມງ ຈົນພຣະອົງບໍ່ມີລົມຫາຍໃຈເຫຼືອໃນຮ່າງກາຍຂອງພຣະອົງໄດ້ແນວໃດ? ຜູ້ໃດສາມາດຮູ້ຈັກພຣະເຈົ້າແດ່? ຜູ້ຄົນພຽງມີຄວາມສຸກກັບພຣະເຈົ້າດ້ວຍຄວາມໂລບມາກໂລພາທີ່ບໍ່ຮູ້ຈັກພໍ, ແຕ່ພວກເຂົາບໍ່ເຄີຍຮູ້ຈັກພຣະອົງເລີຍ. ພວກເຂົາໄດ້ຄືບ ແລະ ຢາກເອົາສອກ ແລະ ພວກເຂົາເຮັດໃຫ້ "ພຣະເຢຊູ" ເຊື່ອຟັງຄຳບັນຊາຂອງພວກເຂົາ, ເຊື່ອຟັງຄຳສັ່ງຂອງພວກເຂົາທັງສິ້ນ. ມີໃຜແດ່ທີ່ເຄີຍສະແດງສິ່ງໃດສິ່ງໜຶ່ງໃນທາງແຫ່ງຄວາມເມດຕາຕໍ່ບຸດມະນຸດຄົນນີ້ ຜູ້ທີ່ບໍ່ມີບ່ອນໃຫ້ວາງຫົວຂອງພຣະອົງ? ຜູ້ໃດແດ່ທີ່ເຄີຍຄິດຮ່ວມກຳລັງກັບພຣະອົງເພື່ອປະຕິບັດການຝາກຝັງຂອງພຣະເຈົ້າພຣະບິດາ? ຜູ້ໃດແດ່ທີ່ເຄີຍໃຊ້ຄວາມຄິດສຳລັບພຣະເຈົ້າ? ມີໃຜແດ່ທີ່ເຄີຍຄຳນຶງເຖິງຄວາມລຳບາກຂອງພຣະອົງ? ຫາກປາສະຈາກຄວາມຮັກຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ, ມະນຸດກໍຈະດຶງພຣະອົງວົກໄປວຽນມາ; ມະນຸດບໍ່ຮູ້ຈັກວ່າແສງສະຫວ່າງ ແລະ ຊີວິດຂອງເຂົາແມ່ນມາຈາກໃສ ແລະ ບໍ່ເຮັດຫຍັງເລີຍ ນອກຈາກວາງແຜນຢ່າງລັບໆກ່ຽວກັບວິທີທີ່ຈະຄຶງ "ພຣະເຢຊູ" ແຫ່ງສອງພັນປີທີ່ຜ່ານມາອີກຄັ້ງ, ຜູ້ທີ່ເຄີຍຜະເຊີນກັບຄວາມເຈັບປວດໃນທ່າມກາງມະນຸດ. "ພຣະເຢຊູ" ກະຕຸ້ນຄວາມກຽດຊັງແບບນັ້ນແທ້ບໍ? ທຸກສິ່ງທີ່ພຣະອົງໄດ້ກະທຳແມ່ນຖືກລືມໄປດົນນານແລ້ວບໍ? ຄວາມກຽດຊັງທີ່ເຊື່ອມຕໍ່ກັນເປັນເວລາຫຼາຍພັນປີຈະຖືກເປີດອອກໃນທີ່ສຸດ. ພວກເຈົ້າຜູ້ທີ່ເປັນຄົນແບບພວກຢິວເອີຍ! ມີເວລາໃດແດ່ທີ່ "ພຣະເຢຊູ" ບໍ່ເຄີຍເປັນມິດກັບພວກເຈົ້າ, ພວກເຈົ້າຈຶ່ງກຽດຊັງພຣະອົງຫຼາຍແທ້? ພຣະອົງໄດ້ເຮັດຫຼາຍສິ່ງຫຼາຍຢ່າງ ແລະ ກ່າວຫຼາຍຢ່າງ, ມັນບໍ່ມີຫຍັງທີ່ເປັນຜົນປະໂຫຍດສຳລັບພວກເຈົ້າເລີຍບໍ? ພຣະອົງໄດ້ມອບຊີວິດຂອງພຣະອົງໃຫ້ກັບພວກເຈົ້າໂດຍບໍ່ໄດ້ຮຽກຮ້ອງຫຍັງເປັນການຕອບແທນ, ພຣະອົງໄດ້ມອບທັງໝົດຂອງພຣະອົງໃຫ້ກັບພວກເຈົ້າ, ພວກເຈົ້າຍັງຕ້ອງການກິນພຣະອົງທັງເປັນແທ້ບໍ? ພຣະອົງໄດ້ມອບທັງໝົດຂອງພຣະອົງໃຫ້ກັບພວກເຈົ້າໂດຍບໍ່ໄດ້ຮັກສາຫຍັງໄວ້, ບໍ່ເຄີຍມີຄວາມສຸກກັບສະຫງ່າລາສີເທິງແຜ່ນດິນໂລກ, ບໍ່ເຄີຍມີຄວາມອົບອຸ່ນຢູ່ທ່າມກາງມະນຸດ, ໄດ້ຮັບຄວາມຮັກທ່າມກາງມະນຸດ ຫຼື ພອນທຸກຢ່າງທ່າມກາງມະນຸດ. ຜູ້ຄົນໃຈດຳກັບພຣະອົງຫຼາຍ, ພຣະອົງບໍ່ເຄີຍໄດ້ຮັບຄວາມຮັ່ງມີທຸກຢ່າງທີ່ຢູ່ເທິງແຜ່ນດິນໂລກ, ພຣະອົງອຸທິດຫົວໃຈທີ່ຈິງໃຈ ແລະ ເລີກເຊິ່ງທັງໝົດຂອງພຣະອົງໃຫ້ກັບມະນຸດ, ພຣະອົງໄດ້ອຸທິດທັງໝົດຂອງພຣະອົງໃຫ້ກັບມະນຸດຊາດ ແລະ ຜູ້ໃດເຄີຍມອບຄວາມອົບອຸ່ນໃຫ້ກັບພຣະອົງແດ່? ມີໃຜເຄີຍມອບຄວາມສຸກສະບາຍໃຫ້ກັບພຣະອົງແດ່? ມະນຸດໄດ້ກອງຄວາມກົດດັນທັງໝົດເທິງພຣະອົງ, ເຂົາໄດ້ມອບຄວາມໂຊກຮ້າຍທັງໝົດໃຫ້ກັບພຣະອົງ, ເຂົາໄດ້ບີບບັງຄັບປະສົບການອັນໂຊກຮ້າຍທ່າມກາງມະນຸດໃຫ້ກັບພຣະອົງ, ເຂົາໂທດ

ພຣະອົງຕໍ່ຄວາມບໍ່ຍຸຕິທຳທຸກຢ່າງ ແລະ ພຣະອົງກໍຍອມຮັບເອົາສິ່ງນັ້ນໂດຍປະລິຍາຍ. ພຣະອົງເຄີຍປະທ້ວງຜູ້ໃດຜູ້ໜຶ່ງບໍ? ພຣະອົງເຄີຍຮຽກຮ້ອງການຕອບແທນແມ່ນແຕ່ເລັກນ້ອຍຈາກຄົນໃດຄົນໜຶ່ງບໍ? ຜູ້ໃດເຄີຍເຫັນອົກເຫັນໃຈພຣະອົງແດ່? ໃນຖານະເປັນຄົນປົກກະຕິ, ມີໃຜແດ່ທ່າມກາງພວກເຈົ້າທີ່ບໍ່ເຄີຍມີໄວເດັກແບບເພີ້ຝັນ? ຜູ້ໃດແດ່ທີ່ບໍ່ເຄີຍເປັນໄວໜຸ່ມຢ່າງມີສີສັນ? ຜູ້ໃດແດ່ທີ່ບໍ່ໄດ້ຮັບຄວາມອົບອຸ່ນຈາກຄົນຮັກ? ຜູ້ໃດແດ່ທີ່ປາສະຈາກຄວາມຮັກຈາກຍາດຕິພີ່ນ້ອງ ແລະ ໝູ່ເພື່ອນ? ຜູ້ໃດແດ່ທີ່ບໍ່ໄດ້ຮັບການເຄົາລົບຈາກຄົນອື່ນ? ຜູ້ໃດແດ່ທີ່ປາສະຈາກຄອບຄົວທີ່ອົບອຸ່ນ? ຜູ້ໃດແດ່ທີ່ປາສະຈາກຄວາມອົບອຸ່ນໃຈຈາກເພື່ອນສະໜິດຂອງພວກເຂົາ? ແລ້ວພຣະອົງເຄີຍໄດ້ຮັບສິ່ງໃດໜຶ່ງທີ່ກ່າວມານີ້ບໍ? ຜູ້ໃດເຄີຍມອບຄວາມອົບອຸ່ນເລັກນ້ອຍໃຫ້ກັບພຣະອົງແດ່? ຜູ້ໃດແດ່ທີ່ເຄີຍມອບເສດສ່ວນຂອງຄວາມອົບອຸ່ນໃຈໃຫ້ກັບພຣະອົງ? ຜູ້ໃດແດ່ທີ່ເຄີຍສະແດງສິນທຳເລັກນ້ອຍຂອງມະນຸດໃຫ້ກັບພຣະອົງ? ຜູ້ໃດແດ່ທີ່ເຄີຍອົດທົນກັບພຣະອົງ? ຜູ້ໃດແດ່ທີ່ເຄີຍຖືກພຣະອົງໃຊ້ໃນລະຫວ່າງເວລາທີ່ລຳບາກ? ຜູ້ໃດເຄີຍຜ່ານຊີວິດທີ່ລຳບາກກັບພຣະອົງບໍ່? ມະນຸດບໍ່ເຄີຍຫຼຸດຜ່ອນສິ່ງທີ່ເຂົາຮຽກຮ້ອງຈາກພຣະອົງເລີຍ; ເຂົາໄດ້ແຕ່ຮຽກຮ້ອງຈາກພຣະອົງຢ່າງບໍ່ລັງເລໃຈ, ຄືກັບວ່າເມື່ອພຣະອົງມາເຖິງໂລກຂອງມະນຸດ, ພຣະອົງເປັນງົວ ຫຼື ມ້າຂອງມະນຸດ, ເປັນນັກໂທດຂອງເຮົາ ແລະ ຕ້ອງມອບທັງໝົດຂອງພຣະອົງໃຫ້ກັບມະນຸດ; ຖ້າບໍ່ດັ່ງນັ້ນ, ມະນຸດຈະບໍ່ໃຫ້ອະໄພພຣະອົງຈັກເທື່ອ, ຈະບໍ່ໃຈເຢັນກັບພຣະອົງ, ຈະບໍ່ເອີ້ນພຣະອົງວ່າພຣະເຈົ້າຈັກເທື່ອ ແລະ ຈະບໍ່ນັບຖືພຣະອົງຢ່າງສູງ. ມະນຸດໂຫດຮ້າຍເກີນໄປໃນທັດສະນະຄະຕິຂອງເຂົາທີ່ມີຕໍ່ພຣະເຈົ້າ, ຄືກັບວ່າເຂົາຕັ້ງໃຈທໍລະມານພຣະເຈົ້າຈົນຕາຍ, ຫຼັງຈາກນັ້ນ ເຂົາຈຶ່ງຈະປ່ອຍສິ່ງທີ່ເຂົາຮຽກຮ້ອງຈາກພຣະເຈົ້າ; ຖ້າບໍ່ດັ່ງນັ້ນ ມະນຸດກໍຈະບໍ່ຫຼຸດມາດຕະຖານໃນສິ່ງທີ່ເຂົາຮຽກຮ້ອງຈາກພຣະເຈົ້າຈັກເທື່ອ. ມະນຸດແບບນີ້ຈະບໍ່ຖືກພຣະເຈົ້າລັງກຽດໄດ້ແນວໃດ? ສິ່ງນີ້ບໍ່ແມ່ນໂສກະນາດຕະກຳໃນປັດຈຸບັນບໍ? ຄວາມສຳນຶກຂອງມະນຸດບໍ່ມີບ່ອນໃຫ້ເຫັນເລີຍ. ເຂົາສືບຕໍ່ເວົ້າວ່າເຂົາຈະຕອບແທນຄວາມຮັກຂອງພຣະເຈົ້າ, ແຕ່ເຂົາກໍຜ່າພຣະເຈົ້າອອກ ແລະ ທໍລະມານພຣະອົງຈົນຕາຍ. ນີ້ບໍ່ແມ່ນ “ສູດລັບ” ໃນຄວາມເຊື່ອທີ່ເຂົາມີຕໍ່ພຣະເຈົ້າ ເຊິ່ງຖືກສືບຕໍ່ຈາກບັນພະບຸລຸດຂອງເຂົາບໍ? ບໍ່ມີບ່ອນໃດທີ່ຈະບໍ່ພົບ “ຊາວຢິວ” ແລະ ໃນປັດຈຸບັນ ພວກເຂົາຍັງປະຕິບັດພາລະກິດແບບເກົ່າ, ພວກເຂົາຍັງປະຕິບັດພາລະກິດເດີມໃນການຕໍ່ຕ້ານພຣະເຈົ້າ ແລະ ຍັງເຊື່ອວ່າພວກເຂົາກຳລັງຍົກພຣະເຈົ້າຂຶ້ນສູງ. ສາຍຕາຂອງມະນຸດເອງຈະສາມາດຮູ້ຈັກພຣະເຈົ້າໄດ້ແນວໃດ? ມະນຸດທີ່ດຳລົງຊີວິດໃນເນື້ອໜັງຈະຖືກປະຕິບັດຕໍ່ແບບພຣະເຈົ້າ ເຊິ່ງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ ຜູ້ທີ່ມາຈາກພຣະວິນຍານໄດ້ແນວໃດ? ຜູ້ໃດແດ່ທ່າມກາງມະນຸດທີ່ຮູ້ຈັກພຣະອົງ? ຄວາມຈິງມີຢູ່ໃສທ່າມກາງມະນຸດ? ຄວາມຊອບທຳທີ່ແທ້ຈິງແມ່ນຢູ່ໃສ? ຜູ້ໃດສາມາດຮູ້ຈັກອຸປະນິໄສຂອງພຣະເຈົ້າແດ່? ຜູ້ໃດແດ່ທີ່ສາມາດແຂ່ງຂັນກັບພຣະເຈົ້າທີ່ຢູ່ໃນສະຫວັນ? ບໍ່ແປກໃຈເລີຍວ່າເມື່ອພຣະອົງໄດ້ມາຢູ່ທ່າມກາງມະນຸດ, ບໍ່ມີໃຜຮູ້ຈັກພຣະເຈົ້າ ແລະ ພຣະອົງຖືກປະຕິເສດ. ມະນຸດຈະສາມາດອົດທົນຕໍ່ການເປັນຢູ່ຂອງພຣະເຈົ້າໄດ້ແນວໃດ? ເຂົາຈະຍອມໃຫ້ແສງສະຫວ່າງຂັບໄລ່ຄວາມມືດອອກຈາກແຜ່ນດິນໂລກໄດ້ແນວໃດ? ສິ່ງເຫຼົ່ານີ້ບໍ່ແມ່ນການອຸທິດທີ່ມີກຽດຂອງມະນຸດບໍ?

ສິ່ງນີ້ບໍ່ແມ່ນເສັ້ນທາງທີ່ຊື່ສັດຂອງມະນຸດບໍ? ແລ້ວພາລະກິດຂອງພຣະເຈົ້າບໍ່ໄດ້ສຸມໃສ່ທາງເຂົ້າຂອງມະນຸດບໍ? ເຮົາປາຖະໜາໃຫ້ພວກເຈົ້າລວມພາລະກິດຂອງພຣະເຈົ້າກັບທາງເຂົ້າຂອງມະນຸດ ແລະ ຈັດຕັ້ງຄວາມສຳພັນທີ່ດີລະຫວ່າງມະນຸດ ແລະ ພຣະເຈົ້າ ແລະ ປະຕິບັດໜ້າທີ່ທີ່ມະນຸດຄວນປະຕິບັດໃຫ້ສຸດຄວາມສາມາດຂອງພວກເຈົ້າ. ໃນວິທີນີ້, ພາລະກິດຂອງພຣະເຈົ້າຈະມາເຖິງຈຸບຈົບໃນພາຍຫຼັງດ້ວຍການທີ່ພຣະອົງໄດ້ຮັບສະຫງ່າລາສີໃນຕອນສຸດທ້າຍ!

# ນິມິດແຫ່ງພາລະກິດຂອງພຣະເຈົ້າ (1)

ໂຢຮັນປະຕິບັດພາລະກິດເປັນເວລາເຈັດປີໃຫ້ກັບພຣະເຢຊູ ແລະ ໄດ້ບຸກເບີກຫົນທາງແລ້ວເມື່ອພຣະເຢຊູມາເຖິງ. ກ່ອນໜ້ານີ້ ຂ່າວປະເສີດແຫ່ງອານາຈັກສະຫວັນທີ່ໂຢຮັນເທດສະໜານັ້ນເປັນທີ່ໄດ້ຍິນທົ່ວດິນແດນ ຍ້ອນວ່າມັນໄດ້ຂະຫຍາຍໄປທົ່ວຢູດາຍ ແລະ ທຸກຄົນກໍເອີ້ນເພິ່ນວ່າ ຜູ້ປະກາດພຣະທຳ. ໃນເວລານັ້ນ, ກະສັດເຮໂຣດປາຖະໜາທີ່ຈະຂ້າໂຢຮັນ ແຕ່ເພິ່ນກໍບໍ່ກ້າ ຍ້ອນຜູ້ຄົນນັບຖືໂຢຮັນໃຫ້ເປັນບຸກຄົນສູງສົ່ງ ແລະ ເຮໂຣດກໍຢ້ານວ່າ ຖ້າເພິ່ນຂ້າໂຢຮັນ ພວກເຂົາກໍຈະກໍ່ກະບົດຕໍ່ເພິ່ນ. ພາລະກິດທີ່ໂຢຮັນປະຕິບັດໄດ້ວາງຮາກຖານທ່າມກາງຄົນສາມັນ ແລະ ເພິ່ນກໍໄດ້ເຮັດໃຫ້ຊາວຢິວກາຍເປັນຜູ້ເຊື່ອ. ເປັນເວລາເຈັດປີທີ່ເພິ່ນໄດ້ບຸກເບີກຫົນທາງໃຫ້ກັບພຣະເຢຊູ, ຈົນເຖິງເວລາທີ່ພຣະເຢຊູໄດ້ເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ. ດ້ວຍເຫດນີ້ ໂຢຮັນຈຶ່ງເປັນຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ທີ່ສຸດ. ພຣະເຢຊູພຽງແຕ່ເລີ່ມຕົ້ນປະຕິບັດພາລະກິດຂອງພຣະອົງຢ່າງເປັນທາງການຫຼັງຈາກທີ່ໂຢຮັນຖືກຂັງຄຸກ. ກ່ອນໜ້າໂຢຮັນ, ບໍ່ເຄີຍມີໃຜເປັນຜູ້ປະກາດພຣະທຳທີ່ບຸກເບີກຫົນທາງໃຫ້ກັບພຣະເຈົ້າ ເພາະວ່າກ່ອນໜ້າພຣະເຢຊູນັ້ນ ພຣະເຈົ້າບໍ່ເຄີຍມາເປັນເນື້ອໜັງຈັກເທື່ອ. ດ້ວຍເຫດນັ້ນຈາກຜູ້ປະກາດພຣະທຳທັງໝົດຈົນເຖິງໂຢຮັນ ເພິ່ນຈຶ່ງເປັນພຽງຄົນດຽວທີ່ບຸກເບີກຫົນທາງໃຫ້ກັບພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ດ້ວຍວິທີນີ້ ໂຢຮັນກໍກາຍເປັນຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ທີ່ສຸດໃນພຣະສັນຍາເດີມ ແລະ ໃໝ່. ໂຢຮັນເລີ່ມເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນເປັນເວລາເຈັດປີກ່ອນການຮັບບັບຕິດສະມາຂອງພຣະເຢຊູ. ສຳລັບປະຊາຊົນແລ້ວ ພາລະກິດທີ່ເພິ່ນປະຕິບັດເບິ່ງຄືເໜືອກວ່າພາລະກິດຂອງພຣະເຢຊູທີ່ເກີດຂຶ້ນພາຍຫຼັງ ແຕ່ຢ່າງໃດກໍຕາມ ເພິ່ນກໍຍັງເປັນພຽງຜູ້ປະກາດພຣະທຳເທົ່ານັ້ນ. ເພິ່ນບໍ່ໄດ້ປະຕິບັດພາລະກິດ ແລະ ກ່າວຢູ່ໃນພຣະວິຫານ ແຕ່ຢູ່ທີ່ເມືອງ ແລະ ໝູ່ບ້ານທີ່ຢູ່ນອກພຣະວິຫານ. ແນ່ນອນ ເພິ່ນກະທຳສິ່ງນີ້ທ່າມກາງຊົນຊາດຢິວ ໂດຍສະເພາະຄົນທີ່ທຸກຍາກ. ມີໜ້ອຍເທື່ອທີ່ໂຢຮັນຈະຕິດຕໍ່ພົວພັນກັບຄົນຊັ້ນສູງໃນສັງຄົມ ເພິ່ນພຽງແຕ່ເຜີຍແຜ່ຂ່າວປະເສີດທ່າມກາງປະຊາຊົນສາມັນໃນຢູດາຍ. ນີ້ແມ່ນເພື່ອຈັດກຽມຄົນທີ່ເໝາະສົມໃຫ້ກັບພຣະເຢຊູເຈົ້າ ແລະ ຈັດກຽມສະຖານທີ່ເໝາະສົມໃຫ້ພຣະອົງປະຕິບັດພາລະກິດ. ຍ້ອນມີຜູ້ປະກາດພຣະທຳເຊັ່ນ ໂຢຮັນທີ່ໄດ້ປູຫົນທາງ, ພຣະເຢຊູເຈົ້າຈຶ່ງສາມາດເລີ່ມລົງມືປະຕິບັດຫົນທາງແຫ່ງໄມ້ກາງແຂນຂອງພຣະອົງທັນທີທີ່ພຣະອົງມາເຖິງ. ເມື່ອພຣະເຈົ້າກາຍມາເປັນເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງ, ພຣະອົງບໍ່ຈຳເປັນຕ້ອງປະຕິບັດພາລະກິດແຫ່ງການເລືອກເອົາຜູ້ຄົນ ແລະ ບໍ່ຈຳເປັນຕ້ອງສະແຫວງຫາຜູ້ຄົນ ຫຼື ສະຖານທີ່ເພື່ອປະຕິບັດພາລະກິດດ້ວຍຕົວພຣະອົງເອງ. ພຣະອົງບໍ່ໄດ້ປະຕິບັດພາລະກິດດັ່ງກ່າວໃນຕອນທີ່ພຣະອົງສະເດັດມາ; ຄົນທີ່ເໝາະສົມຖືກຈັດກຽມໃຫ້ກັບພຣະອົງແລ້ວ ກ່ອນທີ່ພຣະອົງຈະມາເຖິງ. ໂຢຮັນໄດ້ສຳເລັດພາລະກິດນີ້ແລ້ວກ່ອນທີ່ພຣະເຢຊູເລີ່ມພາລະກິດຂອງພຣະອົງ ຍ້ອນເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ມາເຖິງເພື່ອປະຕິບັດພາລະກິດຂອງພຣະອົງ, ພຣະອົງກໍເລີ່ມປະຕິບັດພາລະກິດໃນຄົນທີ່ລໍຖ້າພຣະອົງເປັນເວລາດົນທັນທີ. ພຣະເຢຊູບໍ່ໄດ້ສະເດັດມາເພື່ອປະຕິບັດພາລະກິດ

ແຫ່ງການແກ້ໄຂຂອງມະນຸດ. ພຣະອົງພຽງແຕ່ສະເດັດມາເພື່ອປະຕິບັດພັນທະກິດທີ່ພຣະອົງຕ້ອງປະຕິບັດ ແລະ ສິ່ງອື່ນໆແມ່ນບໍ່ມີສ່ວນກ່ຽວຂ້ອງກັບພຣະອົງເລີຍ. ເມື່ອໂຢຮັນມາ, ເພິ່ນບໍ່ໄດ້ເຮັດຫຍັງເລີຍ ນອກຈາກນໍາເອົາກຸ່ມຄົນທີ່ຍອມຮັບຂ່າວປະເສີດແຫ່ງອານາຈັກສະຫວັນອອກຈາກພຣະວິຫານ ແລະ ທ່າມກາງຊາວຢິວ ເພື່ອວ່າພວກເຂົາຈະກາຍເປັນເປົ້າໝາຍແຫ່ງພາລະກິດຂອງພຣະເຢຊູເຈົ້າ. ໂຢຮັນປະຕິບັດພາລະກິດເປັນເວລາເຈັດປີ ເຊິ່ງເວົ້າໄດ້ວ່າ ເພິ່ນເຜີຍແຜ່ຂ່າວປະເສີດເປັນເວລາເຈັດປີ. ໃນລະຫວ່າງພາລະກິດຂອງໂຢຮັນ, ເພິ່ນບໍ່ໄດ້ສະແດງອິດທິລິດຫຼາຍຢ່າງ, ຍ້ອນພາລະກິດຂອງເພິ່ນແມ່ນການບຸກເບີກຫົນທາງ, ມັນເປັນພາລະກິດແຫ່ງການຈັດກຽມ. ພາລະກິດອື່ນໆທັງໝົດ ເຊິ່ງເປັນພາລະກິດທີ່ພຣະເຢຊູກໍາລັງຈະປະຕິບັດ ແມ່ນບໍ່ກ່ຽວຂ້ອງກັບເພິ່ນເລີຍ; ເພິ່ນພຽງແຕ່ຮຽກຮ້ອງໃຫ້ມະນຸດສາລະພາບຄວາມຜິດບາບຂອງເຂົາ ແລະ ກັບໃຈໃໝ່ ແລະ ໃຫ້ບັບຕິດສະມາກັບຜູ້ຄົນ ເພື່ອພວກເຂົາຈະໄດ້ລອດພົ້ນ. ເຖິງແມ່ນເພິ່ນປະຕິບັດພາລະກິດໃໝ່ ແລະ ເປີດເສັ້ນທາງທີ່ບໍ່ມີມະນຸດຄົນໃດເຄີຍຍ່າງມາກ່ອນຈັກເທື່ອ, ເພິ່ນກໍພຽງແຕ່ບຸກເບີກຫົນທາງໃຫ້ກັບພຣະເຢຊູ. ເພິ່ນເປັນພຽງຜູ້ປະກາດພຣະທໍາທີ່ປະຕິບັດພາລະກິດແຫ່ງການຈັດກຽມ ແລະ ເພິ່ນບໍ່ສາມາດປະຕິບັດພາລະກິດຂອງພຣະເຢຊູໄດ້. ເຖິງແມ່ນວ່າພຣະເຢຊູບໍ່ແມ່ນຜູ້ທໍາອິດທີ່ເທດສະໜາກ່ຽວກັບຂ່າວປະເສີດແຫ່ງອານາຈັກສະຫວັນ ແລະ ເຖິງແມ່ນພຣະອົງສືບຕໍ່ຕາມເສັ້ນທາງທີ່ໂຢຮັນໄດ້ເລີ່ມຕົ້ນ, ແຕ່ກໍບໍ່ມີຜູ້ໃດທີ່ສາມາດປະຕິບັດພາລະກິດຂອງພຣະອົງໄດ້ ແລະ ພາລະກິດນັ້ນກໍຢູ່ເໜືອພາລະກິດຂອງໂຢຮັນ. ພຣະເຢຊູບໍ່ສາມາດຈັດກຽມຫົນທາງຂອງພຣະອົງເອງ; ພາລະກິດຂອງພຣະອົງແມ່ນຖືກປະຕິບັດແທນພຣະເຈົ້າໂດຍກົງ. ດ້ວຍເຫດນັ້ນ ບໍ່ວ່າໂຢຮັນຈະປະຕິບັດພາລະກິດເທົ່າໃດປີ, ເພິ່ນກໍຍັງເປັນຜູ້ປະກາດພຣະທໍາ ແລະ ຍັງເປັນຜູ້ທີ່ບຸກເບີກຫົນທາງ. ພາລະກິດສາມປີທີ່ພຣະເຢຊູປະຕິບັດລື່ນເກີນພາລະກິດເຈັດປີຂອງໂຢຮັນ, ຍ້ອນແກ່ນແທ້ແຫ່ງພາລະກິດຂອງພຣະອົງບໍ່ຄືກັນ. ເມື່ອພຣະເຢຊູເລີ່ມປະຕິບັດພັນທະກິດຂອງພຣະອົງ ເຊິ່ງກໍເປັນເວລາທີ່ພາລະກິດຂອງໂຢຮັນມາເຖິງຈຸດສິ້ນສຸດ, ໂຢຮັນໄດ້ຈັດກຽມຜູ້ຄົນ ແລະ ສະຖານທີ່ຢ່າງພຽງພໍໃຫ້ພຣະເຢຊູເຈົ້ານໍາໃຊ້ ແລະ ສິ່ງເຫຼົ່ານັ້ນກໍພຽງພໍສໍາລັບພຣະເຢຊູເຈົ້າເພື່ອເລີ່ມພາລະກິດສາມປີ. ດ້ວຍເຫດນັ້ນ ທັນທີທີ່ພາລະກິດຂອງໂຢຮັນສໍາເລັດລົງ, ພຣະເຢຊູເຈົ້າກໍເລີ່ມພາລະກິດຂອງພຣະອົງເອງຢ່າງເປັນທາງການ ແລະ ຄໍາເວົ້າທີ່ໂຢຮັນໄດ້ເວົ້າໄວ້ກໍຖືກປະຖິ້ມ. ນັ້ນກໍຍ້ອນວ່າ ພາລະກິດທີ່ໂຢຮັນກະທໍາແມ່ນເພື່ອການປ່ຽນແປງເທົ່ານັ້ນ ແລະ ຄໍາເວົ້າຂອງເພິ່ນກໍບໍ່ແມ່ນພຣະທໍາແຫ່ງຊີວິດທີ່ຈະນໍາພາມະນຸດໄປສູ່ການເຕີບໂຕໃໝ່; ສຸດທ້າຍແລ້ວ ຄໍາເວົ້າຂອງເພິ່ນກໍພຽງແຕ່ເພື່ອນໍາໃຊ້ຊົ່ວຄາວເທົ່ານັ້ນ.

ພາລະກິດທີ່ພຣະເຢຊູປະຕິບັດບໍ່ແມ່ນສິ່ງທີ່ເໜືອທໍາມະຊາດ; ມີຂະບວນການໃນພາລະກິດດັ່ງກ່າວ ແລະ ພາລະກິດນັ້ນກໍດໍາເນີນໄປຕາມກົດເກນປົກກະຕິຂອງທຸກສິ່ງ. ໃນຊ່ວງເວລາຫົກເດືອນສຸດທ້າຍຂອງຊີວິດຂອງພຣະອົງ, ພຣະເຢຊູຮູ້ຢ່າງໝັ້ນໃຈວ່າ ພຣະອົງໄດ້ສະເດັດມາເພື່ອປະຕິບັດພາລະກິດນີ້ ແລະ ຮູ້ວ່າ ພຣະອົງໄດ້ສະເດັດມາເພື່ອຖືກຄຶງໃສ່ໄມ້ກາງແຂນ. ກ່ອນທີ່ພຣະອົງຈະຖືກຄຶງໃສ່ໄມ້ກາງແຂນ, ພຣະເຢຊູອະທິຖານຢ່າງຕໍ່ເນື່ອງຫາພຣະເຈົ້າພຣະບິດາ ເໝືອນກັບທີ່ພຣະອົງອະທິຖານ

ສາມຄັ້ງໃນສວນເກັດເສມາເນ. ຫຼັງຈາກທີ່ພຣະອົງໄດ້ຮັບບັບຕິດສະມາ, ພຣະເຢຊູກໍປະຕິບັດພັນທະກິດຂອງພຣະອົງເປັນເວລາສາມປີເຄິ່ງ ແລະ ພາລະກິດທີ່ເປັນທາງການຂອງພຣະອົງກໍກິນເວລາສອງປີເຄິ່ງ. ໃນລະຫວ່າງປີທຳອິດນັ້ນ ພຣະອົງຖືກຊາຕານກ່າວຫາ ແລະ ຖືກມະນຸດລົບກວນ ແລະ ຕ້ອງປະສົບກັບການລໍ້ລວງຂອງມະນຸດ. ພຣະອົງເອົາຊະນະການລໍ້ລວງຫຼາຍຢ່າງໃນຂະນະທີ່ປະຕິບັດພາລະກິດຂອງພຣະອົງ. ໃນຊ່ວງເວລາຫົກເດືອນສຸດທ້າຍ, ເມື່ອພຣະເຢຊູໃກ້ຈະຖືກຄຶງໃສ່ໄມ້ກາງແຂນ, ໄດ້ມີຄຳເວົ້າອອກຈາກປາກຂອງເປໂຕວ່າ ພຣະອົງເປັນພຣະບຸດຂອງພຣະເຈົ້າຜູ້ຊົງມີຊີວິດຢູ່ ແລະ ພຣະອົງເປັນພຣະຄຣິດ. ພຽງແຕ່ເມື່ອນັ້ນພາລະກິດຂອງພຣະອົງຈຶ່ງເປັນທີ່ຮູ້ຈັກກັບທຸກຄົນ ແລະ ພຽງແຕ່ເມື່ອນັ້ນຕົວຕົນຂອງພຣະອົງຈຶ່ງຖືກເປີດເຜີຍສູ່ສາທາລະນະ. ຫຼັງຈາກນັ້ນ, ພຣະເຢຊູກໍບອກສາວົກຂອງພຣະອົງວ່າ ພຣະອົງກຳລັງຈະຖືກຄຶງໃສ່ໄມ້ກາງແຂນເພື່ອມະນຸດ ແລະ ໃນວັນຖ້ວນສາມຫຼັງຈາກນັ້ນ ພຣະອົງຈະຟື້ນຄືນມາອີກຄັ້ງ; ພຣະອົງໄດ້ສະເດັດມາເພື່ອປະຕິບັດພາລະກິດແຫ່ງການໄຖ່ບາບ ແລະ ພຣະອົງເປັນພຣະຜູ້ໄຖ່. ມີພຽງແຕ່ໃນເວລາຫົກເດືອນສຸດທ້າຍ ພຣະອົງຈຶ່ງເປີດເຜີຍຕົວຕົນຂອງພຣະອົງ ແລະ ພາລະກິດທີ່ພຣະອົງເຈດຕະນາທີ່ຈະກະທຳ. ນີ້ກໍເປັນເວລາຂອງພຣະເຈົ້າເຊັ່ນດຽວກັນ ແລະ ນີ້ຄືວິທີທີ່ພາລະກິດຕ້ອງຖືກປະຕິບັດ. ໃນເວລານັ້ນ, ສ່ວນໜຶ່ງຂອງພາລະກິດຂອງພຣະເຢຊູແມ່ນສອດຄ່ອງກັບພຣະສັນຍາເດີມ ພ້ອມທັງສອດຄ່ອງກັບກົດລະບຽບຂອງໂມເຊ ແລະ ພຣະທຳຂອງພຣະເຢໂຮວາໃນລະຫວ່າງຍຸກແຫ່ງພຣະບັນຍັດ. ພຣະເຢຊູນຳໃຊ້ທຸກສິ່ງເຫຼົ່ານີ້ເພື່ອປະຕິບັດສ່ວນໜຶ່ງຂອງພາລະກິດຂອງພຣະອົງ. ພຣະອົງເທດສະໜາໃຫ້ກັບຜູ້ຄົນ ແລະ ສັ່ງສອນພວກເຂົາໃນທຳມະສາລາ ແລະ ພຣະອົງກໍນຳໃຊ້ການທຳນາຍຂອງພວກຜູ້ປະກາດພຣະທຳໃນພຣະສັນຍາເດີມເພື່ອຕຳໜິຕິຕຽນພວກຟາຣີຊາຍທີ່ເປັນສັດຕູກັບພຣະອົງ ແລະ ນຳໃຊ້ພຣະທຳໃນພຣະຄຳພີເພື່ອເປີດໂປງຄວາມບໍ່ເຊື່ອຟັງຂອງພວກເຂົາ ແລ້ວກໍກ່າວໂທດພວກເຂົາ. ຍ້ອນພວກເຂົາກຽດຊັງໃນສິ່ງທີ່ພຣະເຢຊູໄດ້ກະທຳ; ໂດຍສະເພາະແລ້ວ ພາລະກິດສ່ວນໃຫຍ່ຂອງພຣະເຢຊູແມ່ນບໍ່ສອດຄ່ອງກັບກົດລະບຽບໃນພຣະຄຳພີ ແລະ ຍິ່ງໄປກວ່ານັ້ນ ສິ່ງທີ່ພຣະອົງສັ່ງສອນກໍສູງສົ່ງກວ່າຄຳເວົ້າຂອງພວກເຂົາເອງ ແລະ ຍິ່ງສູງສົ່ງກວ່າສິ່ງທີ່ພວກຜູ້ປະກາດພຣະທຳໄດ້ທຳນາຍໄວ້ໃນພຣະຄຳພີ. ພາລະກິດຂອງພຣະເຢຊູແມ່ນພຽງແຕ່ເພື່ອການໄຖ່ມະນຸດ ແລະ ການຖືກຄຶງໃສ່ໄມ້ກາງແຂນ. ສະນັ້ນຈຶ່ງບໍ່ຈຳເປັນສຳລັບພຣະອົງທີ່ຈະກ່າວພຣະທຳເພີ່ມເພື່ອເອົາຊະນະມະນຸດຄົນໃດຄົນໜຶ່ງ. ຫຼາຍສິ່ງທີ່ພຣະອົງສັ່ງສອນມະນຸດກໍອອກມາຈາກພຣະທຳໃນພຣະຄຳພີ ແລະ ເຖິງແມ່ນພາລະກິດຂອງພຣະອົງຈະບໍ່ໄດ້ໃຫຍ່ກວ່າພຣະຄຳພີ, ແຕ່ພຣະອົງກໍຍັງສາມາດເຮັດໃຫ້ພາລະກິດແຫ່ງການຖືກຄຶງໃສ່ໄມ້ກາງແຂນສຳເລັດລົງ. ພາລະກິດຂອງພຣະອົງບໍ່ແມ່ນພາລະກິດແຫ່ງພຣະທຳ ຫຼື ບໍ່ແມ່ນເພື່ອເອົາຊະນະມະນຸດຊາດ, ແຕ່ແມ່ນເພື່ອໄຖ່ມະນຸດຊາດ. ພຣະອົງພຽງແຕ່ເຮັດໜ້າທີ່ເປັນເຄື່ອງຖວາຍບູຊາແທນຄວາມຜິດບາບໃຫ້ກັບມະນຸດຊາດເທົ່ານັ້ນ ແລະ ບໍ່ໄດ້ເຮັດໜ້າທີ່ເປັນແຫຼ່ງກຳເນີດແຫ່ງພຣະທຳສຳລັບມະນຸດຊາດ. ພຣະອົງບໍ່ໄດ້ປະຕິບັດພາລະກິດຂອງຊາວຕ່າງຊາດ ເຊິ່ງເປັນພາລະກິດແຫ່ງການເອົາຊະນະມະນຸດ, ແຕ່ປະຕິບັດພາລະກິດແຫ່ງການຄຶງກາງແຂນ, ເຊິ່ງເປັນພາລະກິດທີ່ກະທຳທ່າມກາງຄົນທີ່ເຊື່ອວ່າມີພຣະເຈົ້າ. ເຖິງແມ່ນພາລະກິດຂອງພຣະອົງໄດ້ຮັບ

ການປະຕິບັດບົນພື້ນຖານແຫ່ງພຣະຄຳພີ ແລະ ພຣະອົງນຳໃຊ້ສິ່ງທີ່ພວກຜູ້ປະກາດພຣະທຳທີ່ເກົ່າແກ່ໄດ້ກ່າວໄວ້ລ່ວງໜ້າເພື່ອປະນາມພວກຟາຣີຊາຍ, ນີ້ກໍພຽງພໍທີ່ຈະເຮັດໃຫ້ພາລະກິດແຫ່ງການຖືກຄຶງໃສ່ໄມ້ກາງແຂນຂອງພຣະອົງສຳເລັດລົງແລ້ວ. ຖ້າພາລະກິດໃນປັດຈຸບັນຍັງຖືກປະຕິບັດບົນພື້ນຖານຂອງຄຳທຳນາຍຂອງພວກຜູ້ປະກາດພຣະທຳທີ່ຜ່ານມາ ເຊິ່ງຢູ່ໃນພຣະຄຳພີ, ແລ້ວມັນກໍເປັນໄປບໍ່ໄດ້ເລີຍທີ່ຈະເອົາຊະນະພວກເຈົ້າ, ຍ້ອນພຣະສັນຍາເດີມບໍ່ໄດ້ມີການບັນທຶກກ່ຽວກັບຄວາມບໍ່ເຊື່ອຟັງ ແລະ ຄວາມຜິດບາບຂອງພວກເຈົ້າ ເຊິ່ງເປັນປະຊາຊົນຈີນ ແລະ ບໍ່ມີປະຫວັດສາດກ່ຽວກັບຄວາມຜິດບາບຂອງພວກເຈົ້າເລີຍ. ດ້ວຍເຫດນັ້ນ ຖ້າພາລະກິດນີ້ຍັງຄ້າງຢູ່ໃນພຣະຄຳພີ ພວກເຈົ້າກໍຈະບໍ່ຍອມຕາມຈັກເທື່ອ. ພຣະຄຳພີບັນທຶກແຕ່ປະຫວັດສາດທີ່ຈຳກັດຂອງປະຊາຊົນອິດສະຣາເອນ ເຊິ່ງເປັນສິ່ງທີ່ບໍ່ສາມາດພິສູດວ່າພວກເຈົ້າຊົ່ວຮ້າຍ ຫຼື ດີ ຫຼື ສາມາດຕັດສິນພວກເຈົ້າໄດ້. ໃຫ້ຈິນຕະນາການເບິ່ງວ່າຖ້າເຮົາຕ້ອງຕັດສິນພວກເຈົ້າຕາມປະຫວັດສາດຂອງປະຊາຊົນອິດສະຣາເອນ ແລ້ວພວກເຈົ້າຍັງຈະຕິດຕາມເຮົາເໝືອນກັບທີ່ພວກເຈົ້າກຳລັງເຮັດໃນປັດຈຸບັນນີ້ບໍ? ພວກເຈົ້າຮູ້ຢູ່ບໍວ່າ ພວກເຈົ້າເອົາໃຈຍາກຫຼາຍສ່ຳໃດ? ຖ້າບໍ່ມີພຣະທຳທີ່ຖືກກ່າວໃນລະຫວ່າງຂັ້ນຕອນນີ້ ແລ້ວມັນກໍເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພາລະກິດແຫ່ງການເອົາຊະນະນັ້ນສຳເລັດລົງ. ເພາະເຮົາບໍ່ໄດ້ສະເດັດມາເພື່ອຖືກຄຶງທີ່ໄມ້ກາງແຂນ, ເຮົາຕ້ອງກ່າວພຣະທຳທີ່ແຕກຕ່າງຈາກພຣະຄຳພີ ເພື່ອວ່າພວກເຈົ້າອາດຈະຖືກເອົາຊະນະ. ພາລະກິດທີ່ພຣະເຢຊູກະທຳເປັນພຽງຂັ້ນຕອນໜຶ່ງທີ່ສູງກວ່າພຣະສັນຍາເດີມ; ພາລະກິດດັ່ງກ່າວແມ່ນຖືກໃຊ້ເພື່ອເລີ່ມຕົ້ນຍຸກໜຶ່ງ ແລະ ເພື່ອນຳພາຍຸກດັ່ງກ່າວ. ເປັນຫຍັງພຣະອົງຈຶ່ງກ່າວວ່າ: "ເຮົາບໍ່ໄດ້ມາເພື່ອທຳລາຍພຣະບັນຍັດ ແຕ່ເພື່ອເຮັດໃຫ້ມັນສຳເລັດ"? ແຕ່ໃນພາລະກິດຂອງພຣະອົງກໍມີຫຼາຍຢ່າງທີ່ແຕກຕ່າງຈາກກົດລະບຽບທີ່ນຳໃຊ້ ແລະ ພຣະບັນຍັດທີ່ປະຊາຊົນອິດສະຣາເອນແຫ່ງພຣະສັນຍາເດີມໄດ້ຕິດຕາມ, ຍ້ອນພຣະອົງບໍ່ໄດ້ມາເພື່ອເຊື່ອຟັງກົດລະບຽບ ແຕ່ເພື່ອເຮັດໃຫ້ມັນສຳເລັດ. ຂະບວນການທີ່ເຮັດໃຫ້ມັນສຳເລັດລວມມີຫຼາຍສິ່ງທີ່ເປັນຄວາມຈິງ ນັ້ນກໍຄື: ພາລະກິດຂອງພຣະອົງແມ່ນຕາມຄວາມເປັນຈິງ ແລະ ແທ້ຈິງຫຼາຍຂຶ້ນ ແລະ ຍິ່ງໄປກວ່ານັ້ນ ມັນມີຊີວິດຊີວາ ແລະ ບໍ່ໄດ້ຍຶດໝັ້ນກັບກົດລະບຽບຢ່າງຫຼັບຫູຫຼັບຕາ. ປະຊາຊົນອິດສະຣາເອນບໍ່ໄດ້ຮັກສາວັນຊະບາໂຕບໍ? ເມື່ອພຣະເຢຊູສະເດັດມາ ພຣະອົງບໍ່ໄດ້ຮັກສາວັນຊະບາໂຕ ຍ້ອນພຣະອົງກ່າວວ່າ ບຸດມະນຸດເປັນພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕ ແລະ ເມື່ອພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕສະເດັດມາເຖິງ, ພຣະອົງກໍຈະເຮັດຕາມທີ່ພຣະອົງປາຖະໜາ. ພຣະອົງສະເດັດມາເພື່ອເຮັດໃຫ້ກົດລະບຽບແຫ່ງພຣະສັນຍາເດີມສຳເລັດ ແລະ ເພື່ອປ່ຽນແປງກົດລະບຽບເຫຼົ່ານັ້ນ. ທຸກສິ່ງທີ່ກະທຳໃນປັດຈຸບັນແມ່ນອີງຕາມປັດຈຸບັນ ແຕ່ມັນກໍຍັງຕັ້ງຢູ່ບົນພື້ນຖານແຫ່ງພາລະກິດຂອງພຣະເຢໂຮວາໃນຍຸກແຫ່ງພຣະບັນຍັດ ແລະ ບໍ່ໄດ້ລະເມີດຂອບເຂດນີ້. ຕົວຢ່າງເຊັ່ນ: ການລະມັດລະວັງຄຳເວົ້າຂອງພວກເຈົ້າ ແລະ ບໍ່ລ່ວງເກີນຜົວເມຍຜູ້ອື່ນ, ສິ່ງເຫຼົ່ານີ້ບໍ່ແມ່ນກົດລະບຽບໃນພຣະສັນຍາເດີມບໍ? ໃນປັດຈຸບັນ, ສິ່ງທີ່ຮຽກຮ້ອງຈາກເຈົ້າບໍ່ໄດ້ຖືກຈຳກັດແຕ່ພຽງໃນພຣະບັນຍັດສິບປະການ ແຕ່ປະກອບດ້ວຍພຣະບັນຍັດ ແລະ ກົດລະບຽບທີ່ມີຄຳສັ່ງສູງກວ່າສິ່ງເຫຼົ່ານັ້ນທີ່ກຳນົດໃນອະດີດ, ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ສິ່ງທີ່ກຳນົດໄວ້ກ່ອນໜ້ານີ້ແມ່ນຖືກລຶບລ້າງ,

ຍ້ອນແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຈົ້າແມ່ນຖືກປະຕິບັດບົນພື້ນຖານຂອງຂັ້ນຕອນທີ່ເກີດຂຶ້ນກ່ອນໜ້າ. ສຳລັບພາລະກິດທີ່ພຣະເຢໂຮວາເຮັດໃນອິດສະຣາເອນນັ້ນ ເຊັ່ນ: ຮຽກຮ້ອງໃຫ້ປະຊາຊົນຖວາຍເຄື່ອງບູຊາ, ນັບຖືບິດາມານດາ, ບໍ່ບູຊາຮູບປັ້ນ, ບໍ່ທຳຮ້າຍ ຫຼື ສາບແຊ່ງຄົນອື່ນ, ບໍ່ລ່ວງເກີນຜົວເມຍຄົນອື່ນ, ບໍ່ສູບຢາ ຫຼື ດື່ມເຫຼົ້າ ແລະ ບໍ່ກິນສິ່ງທີ່ຕາຍ ຫຼື ດື່ມເລືອດ, ສິ່ງນີ້ບໍ່ໄດ້ປະກອບເປັນພື້ນຖານສຳລັບການປະຕິບັດຂອງເຈົ້າແມ່ນແຕ່ໃນປັດຈຸບັນບໍ? ພາລະກິດໄດ້ຮັບການປະຕິບັດບົນພື້ນຖານແຫ່ງອະດີດຈົນມາເຖິງປັດຈຸບັນ. ເຖິງແມ່ນວ່າກົດລະບຽບຂອງອະດີດບໍ່ໄດ້ຖືກກ່າວເຖິງອີກຕໍ່ໄປແລ້ວ ແລະ ໄດ້ມີການຮຽກຮ້ອງໃໝ່ສຳລັບເຈົ້າ, ແຕ່ກົດລະບຽບເຫຼົ່ານີ້ກໍບໍ່ໄດ້ຖືກລົບລ້າງ ແລະ ກົງກັນຂ້າມ ມັນຖືກຍົກໃຫ້ສູງຂຶ້ນ. ການເວົ້າວ່າກົດລະບຽບເຫຼົ່ານັ້ນຖືກລົບລ້າງໝາຍຄວາມວ່າຍຸກທີ່ຜ່ານມາແມ່ນຫຼ້າສະໄໝ, ໃນຂະນະທີ່ມີພຣະບັນຍັດບາງຂໍ້ທີ່ພວກເຈົ້າຕ້ອງເຄົາລົບຊົ່ວນິດນິລັນ. ພຣະບັນຍັດໃນອະດີດແມ່ນຖືກນຳເຂົ້າໃນການປະຕິບັດຕົວຈິງແລ້ວ, ໄດ້ກາຍເປັນຊີວິດຂອງມະນຸດ ແລະ ບໍ່ຈຳເປັນຕ້ອງເນັ້ນເຖິງຂໍ້ພຣະບັນຍັດທີ່ວ່າ “ບໍ່ໃຫ້ສູບຢາ” ແລະ “ບໍ່ໃຫ້ດື່ມເຫຼົ້າ” ແລະ ອື່ນໆອີກ. ບົນພື້ນຖານນີ້, ພຣະບັນຍັດໃໝ່ຖືກວາງອອກຕາມຄວາມຕ້ອງການຂອງພວກເຈົ້າໃນປັດຈຸບັນ, ຕາມວຸດທິພາວະຂອງພວກເຈົ້າ ແລະ ຕາມພາລະກິດແຫ່ງປັດຈຸບັນ. ການກຳນົດພຣະບັນຍັດສຳລັບຍຸກໃໝ່ບໍ່ໄດ້ໝາຍເຖິງການລົບລ້າງພຣະບັນຍັດໃນຍຸກເກົ່າ, ແຕ່ເປັນການຍົກພຣະບັນຍັດເຫຼົ່ານັ້ນໃຫ້ສູງຂຶ້ນໂດຍຢູ່ບົນພື້ນຖານນີ້, ເພື່ອເຮັດໃຫ້ການກະທຳຂອງມະນຸດສົມບູນຫຼາຍຍິ່ງຂຶ້ນ ແລະ ສອດຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ. ໃນປັດຈຸບັນ ຖ້າພວກເຈົ້າພຽງແຕ່ຖືກຮຽກຮ້ອງໃຫ້ປະຕິບັດພຣະບັນຍັດ ແລະ ປະຕິບັດຕາມກົດລະບຽບແຫ່ງພຣະສັນຍາເດີມ ໃນລັກສະນະດຽວກັນກັບຊາວອິດສະຣາເອນ ແລະ ຖ້າເຈົ້າຖືກຮຽກຮ້ອງໃຫ້ທ່ອງກົດລະບຽບທີ່ພຣະເຢໂຮວາວາງອອກ ມັນກໍເປັນໄປບໍ່ໄດ້ທີ່ພວກເຈົ້າຈະສາມາດປ່ຽນແປງ. ຖ້າພວກເຈົ້າຕ້ອງປະຕິບັດຕາມພຣະບັນຍັດທີ່ຈຳກັດພຽງແຕ່ໜ້ອຍດຽວ ຫຼື ທ່ອງກົດລະບຽບຢ່າງຫຼວງຫຼາຍຈົນນັບບໍ່ຖ້ວນ, ອຸປະນິໄສເດີມຂອງພວກເຈົ້າກໍ່ຈະຍັງຄົງຝັງເລິກ ແລະ ບໍ່ມີທາງທີ່ຈະຖອນຮາກມັນໄດ້ເລີຍ. ສະນັ້ນ ພວກເຈົ້າກໍຍິ່ງຈະຊົ່ວຊ້າຂຶ້ນເລື້ອຍໆ ແລະ ບໍ່ມີພວກເຈົ້າຄົນໃດທີ່ຈະເຊື່ອຟັງ. ເວົ້າໄດ້ວ່າ ພຣະບັນຍັດທຳມະດາຈຳນວນໜ້ອຍດຽວ ຫຼື ກົດລະບຽບທີ່ນັບບໍ່ຖ້ວນນັ້ນບໍ່ສາມາດຊ່ວຍໃຫ້ພວກເຈົ້າຮູ້ຈັກເຖິງການກະທຳຂອງພຣະເຢໂຮວາໄດ້. ພວກເຈົ້າບໍ່ຄືກັບປະຊາຊົນອິດສະຣາເອນ ນັ້ນກໍຄື: ດ້ວຍການປະຕິບັດກົດລະບຽບ ແລະ ທ່ອງພຣະບັນຍັດ, ພວກເຂົາສາມາດເປັນພະຍານເຖິງການກະທຳຂອງພຣະເຢໂຮວາ ແລະ ອຸທິດພວກເຂົາໃຫ້ກັບພຣະອົງເທົ່ານັ້ນ, ແຕ່ພວກເຈົ້າບໍ່ສາມາດບັນລຸແບບນີ້ໄດ້ ແລະ ພຣະບັນຍັດຈຳນວນໜ້ອຍດຽວໃນຍຸກພຣະສັນຍາເດີມບໍ່ພຽງແຕ່ຈະບໍ່ສາມາດເຮັດໃຫ້ພວກເຈົ້າຍອມມອບຫົວໃຈຂອງພວກເຈົ້າ ຫຼື ປົກປ້ອງພວກເຈົ້າເທົ່ານັ້ນ, ແຕ່ກົງກັນຂ້າມ ມັນຈະເຮັດໃຫ້ພວກເຈົ້າບໍ່ມີລະບຽບ ແລະ ຈະເຮັດໃຫ້ພວກເຈົ້າຕົກສູ່ດິນແດນມໍລະນາ. ຍ້ອນພາລະກິດຂອງເຮົາແມ່ນພາລະກິດແຫ່ງການເອົາຊະນະ ແລະ ແນໃສ່ຄວາມບໍ່ເຊື່ອຟັງ ແລະ ອຸປະນິໄສເດີມຂອງພວກເຈົ້າ. ພຣະທຳທີ່ກະລຸນາຂອງພຣະເຢໂຮວາ ແລະ ພຣະເຢຊູແຕກຕ່າງຈາກພຣະທຳທີ່ຮ້າຍແຮງແຫ່ງການພິພາກສາໃນປັດຈຸບັນ. ຫາກປາສະຈາກພຣະທຳ

ທີ່ຮ້າຍແຮງດັ່ງກ່າວ, ມັນກໍເປັນໄປບໍ່ໄດ້ທີ່ຈະເອົາຊະນະພວກເຈົ້າ "ຜູ້ຊ່ຽວຊານທັງຫຼາຍ" ຜູ້ເຊິ່ງບໍ່ເຊື່ອຟັງເປັນເວລາຫຼາຍພັນປີ. ກົດລະບຽບໃນພຣະສັນຍາເດີມໄດ້ສູນເສຍອຳນາດໃນພວກເຈົ້າດົນນານມາແລ້ວ ແລະ ການພິພາກສາໃນປັດຈຸບັນກໍຍິ່ງເປັນຕາຢ້ານຫຼາຍກວ່າກົດລະບຽບທີ່ເກົ່າແກ່ເຫຼົ່ານັ້ນ. ສິ່ງທີ່ເໝາະສົມກັບພວກເຈົ້າທີ່ສຸດແມ່ນການພິພາກສາ ແລະ ບໍ່ແມ່ນຂໍ້ກຳນົດຂອງກົດລະບຽບທີ່ບໍ່ສຳຄັນ, ຍ້ອນພວກເຈົ້າບໍ່ແມ່ນມະນຸດຊາດແຫ່ງການເລີ່ມຕົ້ນ, ແຕ່ເປັນມະນຸດຊາດທີ່ເສື່ອມຊາມເປັນເວລາຫຼາຍພັນປີ. ສິ່ງທີ່ມະນຸດຕ້ອງບັນລຸໃນປັດຈຸບັນແມ່ນອີງຕາມສະພາວະທີ່ເປັນຈິງຂອງມະນຸດໃນປັດຈຸບັນ, ອີງຕາມຄວາມສາມາດ ແລະ ວຸດທິພາວະທີ່ແທ້ຈິງຂອງມະນຸດໃນຍຸກປັດຈຸບັນ ແລະ ມັນບໍ່ໄດ້ຈຳເປັນທີ່ເຈົ້າຕ້ອງປະຕິບັດຕາມຄຳສັ່ງສອນ. ນີ້ກໍເພື່ອວ່າການປ່ຽນແປງອາດໄດ້ຮັບການບັນລຸໃນອຸປະນິໄສເດີມຂອງເຈົ້າ ແລະ ເພື່ອໃຫ້ເຈົ້າປະຖິ້ມແນວຄິດຂອງເຈົ້າ. ເຈົ້າຄິດວ່າພຣະບັນຍັດແມ່ນກົດລະບຽບບໍ? ສາມາດເວົ້າໄດ້ວ່າ ພວກມັນເປັນເງື່ອນໄຂທົ່ວໄປຂອງມະນຸດ. ພວກມັນບໍ່ແມ່ນກົດລະບຽບທີ່ເຈົ້າຕ້ອງປະຕິບັດຕາມ. ຍົກຕົວຢ່າງເຊັ່ນ: ຂໍ້ຫ້າມສູບຢາ, ສິ່ງນັ້ນແມ່ນກົດລະບຽບບໍ? ມັນບໍ່ແມ່ນກົດລະບຽບ! ມັນເປັນສິ່ງທີ່ຈຳເປັນສຳລັບການເປັນມະນຸດປົກກະຕິ; ມັນບໍ່ແມ່ນກົດລະບຽບ, ແຕ່ເປັນສິ່ງທີ່ຈຳເປັນສຳລັບມະນຸດຊາດທັງປວງ. ໃນປັດຈຸບັນ, ມີພຣະບັນຍັດຈຳນວນຫຼາຍຂໍ້ທີ່ຖືກວາງອອກກໍບໍ່ແມ່ນກົດລະບຽບ, ແຕ່ເປັນສິ່ງທີ່ຈຳເປັນໃນການບັນລຸຄວາມເປັນມະນຸດປົກກະຕິ. ຜູ້ຄົນບໍ່ມີ ຫຼື ຮູ້ຈັກສິ່ງດັ່ງກ່າວໃນອະດີດ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຈຳເປັນຕ້ອງບັນລຸພວກມັນໃນປັດຈຸບັນ ແລະ ສິ່ງດັ່ງກ່າວກໍບໍ່ໄດ້ຖືວ່າເປັນກົດລະບຽບ. ກົດໝາຍບໍ່ຄືກັນກັບກົດລະບຽບ. ກົດລະບຽບທີ່ເຮົາກ່າວເຖິງແມ່ນໝາຍເຖິງພິທີກຳ, ພິທີການ ຫຼື ການປະຕິບັດທີ່ຜິດປົກກະຕິ ແລະ ບໍ່ຖືກຕ້ອງຂອງມະນຸດ; ມັນເປັນກົດລະບຽບທີ່ບໍ່ຊ່ວຍຫຍັງຕໍ່ມະນຸດ, ບໍ່ມີຜົນປະໂຫຍດກັບເຂົາ ແລະ ມັນເປັນວິທີທາງການປະຕິບັດທີ່ບໍ່ມີຄວາມໝາຍເລີຍ. ນີ້ແມ່ນຕົວຢ່າງທີ່ດີສຸດຂອງກົດລະບຽບ ແລະ ກົດລະບຽບດັ່ງກ່າວຕ້ອງຖືກໂຍນຖິ້ມ, ຍ້ອນມັນບໍ່ມີຜົນປະໂຫຍດຫຍັງເລີຍຕໍ່ມະນຸດ. ມີແຕ່ສິ່ງທີ່ເປັນປະໂຫຍດຕໍ່ມະນຸດເທົ່ານັ້ນທີ່ຕ້ອງນຳເຂົ້າສູ່ການປະຕິບັດ.

# ນິມິດແຫ່ງພາລະກິດຂອງພຣະເຈົ້າ (2)

ໃນຍຸກແຫ່ງພຣະຄຸນໄດ້ມີການເທດສະໜາເຖິງຂ່າວປະເສີດແຫ່ງການກັບໃຈ ແລະ ຕັ້ງເງື່ອນໄຂວ່າ ຖ້າມະນຸດເຊື່ອ ແລ້ວເຂົາກໍຈະລອດພົ້ນ. ໃນປັດຈຸບັນ ມີພຽງແຕ່ການສົນທະນາກ່ຽວກັບການເອົາຊະນະ ແລະ ການເຮັດໃຫ້ສົມບູນ ແທນເລື່ອງຄວາມລອດພົ້ນ. ບໍ່ເຄີຍມີການເວົ້າວ່າ ຖ້າບຸກຄົນໃດເຊື່ອ, ຄອບຄົວທັງໝົດຂອງພວກເຂົາກໍຈະໄດ້ຮັບພອນ ຫຼື ເມື່ອຖືກຊ່ວຍໃຫ້ລອດພົ້ນກໍຈະຖືກຊ່ວຍໃຫ້ລອດພົ້ນສະເໝີ. ໃນປັດຈຸບັນ ບໍ່ມີໃຜກ່າວຄຳເວົ້າເຫຼົ່ານີ້ ແລະ ສິ່ງດັ່ງກ່າວກໍເປັນສິ່ງທີ່ຫຼ້າສະໄໝໄປແລ້ວ. ໃນເວລານັ້ນ ພາລະກິດຂອງພຣະເຢຊູແມ່ນພາລະກິດເພື່ອໄຖ່ບາບໃຫ້ກັບມວນມະນຸດຊາດ. ຄວາມຜິດບາບຂອງທຸກຄົນທີ່ເຊື່ອໃນພຣະອົງແມ່ນໄດ້ຮັບການອະໄພ; ຕາບໃດທີ່ເຈົ້າເຊື່ອໃນພຣະອົງ, ພຣະອົງກໍຈະໄຖ່ບາບໃຫ້ກັບເຈົ້າ; ຖ້າເຈົ້າເຊື່ອໃນພຣະອົງ ເຈົ້າກໍບໍ່ມີບາບອີກຕໍ່ໄປ ແລະ ເຈົ້າກໍໄດ້ພົ້ນຈາກຄວາມຜິດບາບຂອງເຈົ້າແລ້ວ. ນີ້ຄືຄວາມໝາຍທີ່ວ່າ ໄດ້ຮັບຄວາມລອດພົ້ນ ແລະ ເປັນຄົນຊອບທຳດ້ວຍຄວາມເຊື່ອ. ແຕ່ເຖິງຢ່າງນັ້ນກໍຕາມ ໃນບັນດາຄົນທີ່ເຊື່ອກໍຍັງມີສິ່ງທີ່ກະບົດ ແລະ ຕໍ່ຕ້ານພຣະເຈົ້າ ເຊິ່ງຈຳເປັນຕ້ອງຄ່ອຍໆຖືກກຳຈັດອອກໄປ. ຄວາມລອດພົ້ນບໍ່ໄດ້ໝາຍຄວາມວ່າ ມະນຸດໄດ້ຖືກພຣະເຢຊູຮັບເອົາຢ່າງສົມບູນ ແຕ່ໝາຍເຖິງ ມະນຸດບໍ່ມີຄວາມບາບອີກຕໍ່ໄປ, ມະນຸດໄດ້ຮັບການອະໄພຄວາມຜິດບາບຂອງເຂົາແລ້ວ. ໂດຍມີເງື່ອນໄຂຄືເຈົ້າເຊື່ອ, ເຈົ້າກໍຈະບໍ່ມີບາບອີກຕໍ່ໄປ. ໃນເວລານັ້ນ ພຣະເຢຊູປະຕິບັດພາລະກິດຫຼາຍຢ່າງ ເຊິ່ງສາວົກຂອງພຣະອົງບໍ່ສາມາດເຂົ້າໃຈໄດ້ ແລະ ກ່າວຫຼາຍຢ່າງທີ່ຜູ້ຄົນບໍ່ເຂົ້າໃຈ. ນີ້ກໍຍ້ອນວ່າ ໃນເວລານັ້ນ ພຣະອົງບໍ່ໄດ້ໃຫ້ຄຳອະທິບາຍຫຍັງ. ສະນັ້ນ ຫຼາຍປີຫຼັງຈາກທີ່ພຣະອົງຈາກໄປ, ມັດທາຍກໍໄດ້ສ້າງລຳດັບເຊື້ອວົງຂອງພຣະເຢຊູຂຶ້ນ ແລະ ຄົນອື່ນໆກໍປະຕິບັດພາລະກິດຫຼາຍຢ່າງທີ່ມາຈາກຄວາມປາຖະໜາຂອງມະນຸດ. ພຣະເຢຊູບໍ່ໄດ້ສະເດັດມາເພື່ອເຮັດໃຫ້ມະນຸດສົມບູນ ແລະ ຮັບເອົາພວກເຂົາ, ແຕ່ມາເພື່ອປະຕິບັດພາລະກິດຂັ້ນຕອນດຽວ ນັ້ນກໍຄືການປະກາດຂ່າວປະເສີດແຫ່ງອານາຈັກສະຫວັນ ແລະ ການເຮັດໃຫ້ພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນສຳເລັດລົງ. ສະນັ້ນ ເມື່ອພຣະເຢຊູຖືກຄຶງໃສ່ໄມ້ກາງແຂນ, ພາລະກິດຂອງພຣະອົງກໍສິ້ນສຸດລົງຢ່າງສົມບູນ. ແຕ່ໃນຂັ້ນຕອນປັດຈຸບັນ ນັ້ນກໍຄື ພາລະກິດແຫ່ງການເອົາຊະນະ, ຈຳເປັນຕ້ອງໄດ້ມີການກ່າວພຣະທຳຫຼາຍຂຶ້ນ, ຕ້ອງມີການປະຕິບັດພາລະກິດຫຼາຍຂຶ້ນ ແລະ ຕ້ອງມີຂະບວນການຫຼາຍຢ່າງ. ພ້ອມນັ້ນ ຄວາມລຶກລັບແຫ່ງພາລະກິດຂອງພຣະເຢຊູ ແລະ ພຣະເຢໂຮວາກໍຕ້ອງຖືກເປີດເຜີຍເຊັ່ນກັນ ເພື່ອທຸກຄົນອາດມີຄວາມເຂົ້າໃຈ ແລະ ຊັດເຈນໃນຄວາມເຊື່ອຂອງພວກເຂົາ, ຍ້ອນນີ້ແມ່ນພາລະກິດແຫ່ງຍຸກສຸດທ້າຍ ແລະ ຍຸກສຸດທ້າຍກໍແມ່ນເວລາສຸດທ້າຍຂອງພາລະກິດຂອງພຣະເຈົ້າ ເຊິ່ງເປັນເວລາແຫ່ງການສິ້ນສຸດລົງຂອງພາລະກິດນີ້. ພາລະກິດຂັ້ນຕອນນີ້ຈະຊີ້ແຈງພຣະບັນຍັດຂອງພຣະເຢໂຮວາ ແລະ ການໄຖ່ບາບຂອງພຣະເຢຊູໃຫ້ກັບເຈົ້າ ແລະ ຫຼັກໆກໍເພື່ອວ່າເຈົ້າຈະໄດ້ເຂົ້າໃຈພາລະກິດທັງໝົດຂອງແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າ ແລະ ເຂົ້າໃຈເຖິງຄວາມໝາຍ ແລະ ແກ່ນແທ້ທັງໝົດຂອງແຜນການຄຸ້ມຄອງຫົກພັນປີນີ້ ແລະ ເຂົ້າໃຈເຖິງເປົ້າໝາຍຂອງພາລະກິດ

ທຸກຢ່າງທີ່ພຣະເຢຊູປະຕິບັດ ແລະ ພຣະທຳທຸກຂໍ້ທີ່ພຣະອົງກ່າວ ແລະ ແມ່ນແຕ່ຄວາມເຊື່ອຖືງົມງວາຍ ແລະ ການບູຊາພຣະຄຳພີຂອງເຈົ້າ. ທຸກສິ່ງນີ້ຈະເຮັດໃຫ້ເຈົ້າເຂົ້າໃຈຢ່າງລະອຽດ. ເຈົ້າຈະໄດ້ເຂົ້າໃຈທັງພາລະກິດທີ່ພຣະເຢຊູປະຕິບັດ ແລະ ພາລະກິດຂອງພຣະເຈົ້າໃນປັດຈຸບັນ; ເຈົ້າຈະເຂົ້າໃຈ ແລະ ເບິ່ງເຫັນຄວາມຈິງ, ຊີວິດ ແລະ ຫົນທາງທັງໝົດ. ໃນຂັ້ນຕອນຂອງພາລະກິດທີ່ພຣະເຢຊູປະຕິບັດນັ້ນ ເປັນຫຍັງພຣະເຢຊູຈຶ່ງຈາກໄປໂດຍບໍ່ປະຕິບັດພາລະກິດແຫ່ງການສິ້ນສຸດ? ເພາະວ່າຂັ້ນຕອນຂອງພາລະກິດຂອງພຣະເຢຊູບໍ່ແມ່ນພາລະກິດຂັ້ນສຸດທ້າຍ. ເມື່ອພຣະເຢຊູຖືກຄຶງໃສ່ໄມ້ກາງແຂນ, ພຣະທຳຂອງພຣະອົງກໍສິ້ນສຸດລົງເຊັ່ນກັນ; ຫຼັງຈາກພຣະອົງຖືກຄຶງໃສ່ໄມ້ກາງແຂນ ພາລະກິດຂອງພຣະອົງກໍສຳເລັດລົງຢ່າງສົມບູນ. ຂັ້ນຕອນໃນປັດຈຸບັນແມ່ນແຕກຕ່າງກັນ ນັ້ນກໍຄື ພຽງແຕ່ຫຼັງຈາກທີ່ພຣະທຳຖືກກ່າວຈົນເຖິງເວລາສຸດທ້າຍ ແລະ ພາລະກິດທັງໝົດຂອງພຣະເຈົ້າສິ້ນສຸດລົງ, ພາລະກິດຂອງພຣະອົງຈຶ່ງຈະສຳເລັດ. ໃນລະຫວ່າງຂັ້ນຕອນຂອງພາລະກິດຂອງພຣະເຢຊູ ມີພຣະທຳຫຼາຍຂໍ້ທີ່ຍັງບໍ່ໄດ້ກ່າວເຖິງ ຫຼື ບໍ່ໄດ້ອະທິບາຍຢ່າງຄົບຖ້ວນ. ແຕ່ເຖິງຢ່າງນັ້ນ ພຣະເຢຊູກໍບໍ່ສົນໃຈວ່າພຣະອົງກ່າວຫຍັງ ຫຼື ບໍ່ໄດ້ກ່າວຫຍັງ, ຍ້ອນພັນທະກິດຂອງພຣະອົງບໍ່ແມ່ນພັນທະກິດແຫ່ງພຣະທຳ ແລະ ສະນັ້ນ ຫຼັງຈາກທີ່ພຣະອົງຖືກຄຶງໃສ່ໄມ້ກາງແຂນ ພຣະອົງກໍຈາກໄປ. ພາລະກິດຂັ້ນຕອນນັ້ນຫຼັກໆແລ້ວແມ່ນເພື່ອການຖືກຄຶງໃສ່ໄມ້ກາງແຂນ ແລະ ບໍ່ຄືກັບຂັ້ນຕອນໃນປັດຈຸບັນ. ພາລະກິດຂັ້ນຕອນນີ້ຫຼັກໆແມ່ນເພື່ອການເຮັດໃຫ້ສຳເລັດ, ການເຮັດໃຫ້ທຸກສິ່ງຊັດເຈນຂຶ້ນ ແລະ ການເຮັດໃຫ້ພາລະກິດທັງໝົດສິ້ນສຸດລົງ. ຖ້າພຣະທຳບໍ່ໄດ້ຖືກກ່າວອອກຈົນເຖິງທີ່ສຸດ ກໍຈະບໍ່ມີທາງທີ່ຈະຈົບພາລະກິດນີ້ລົງໄດ້, ຍ້ອນໃນພາລະກິດຂັ້ນຕອນນີ້ ທຸກພາລະກິດແມ່ນຖືກນຳມາສູ່ຈຸດສິ້ນສຸດ ແລະ ສຳເລັດລົງໂດຍໃຊ້ພຣະທຳ. ໃນເວລານັ້ນ ພຣະເຢຊູປະຕິບັດພາລະກິດຫຼາຍຢ່າງທີ່ມະນຸດບໍ່ສາມາດເຂົ້າໃຈໄດ້. ພຣະອົງຈາກໄປຢ່າງງຽບໆ ແລະ ໃນປັດຈຸບັນນີ້ກໍຍັງມີຫຼາຍຄົນທີ່ບໍ່ເຂົ້າໃຈພຣະທຳຂອງພຣະອົງ ເຊິ່ງພາກັນເຂົ້າໃຈແບບຜິດໆ ແຕ່ກໍຍັງເຊື່ອວ່າຖືກຕ້ອງ ແລະ ບໍ່ຮູ້ວ່າ ພວກເຂົານັ້ນຜິດ. ຂັ້ນຕອນສຸດທ້າຍໃນປັດຈຸບັນນີ້ຈະເຮັດໃຫ້ພາລະກິດຂອງພຣະເຈົ້າສິ້ນສຸດລົງຢ່າງສົມບູນ ແລະ ຈະໃຫ້ຜົນສະຫຼຸບຂອງມັນ. ທຸກຄົນຈະໄດ້ເຂົ້າໃຈ ແລະ ຮູ້ຈັກແຜນການຄຸ້ມຄອງຂອງພຣະເຈົ້າ. ແນວຄິດທີ່ຢູ່ພາຍໃນມະນຸດ, ເຈດຕະນາຂອງເຂົາ, ຄວາມເຂົ້າໃຈທີ່ຜິດ ແລະ ບໍ່ສົມເຫດສົມຜົນຂອງເຂົາ, ແນວຄິດຂອງເຂົາກ່ຽວກັບພາລະກິດຂອງພຣະເຢໂຮວາ ແລະ ພຣະເຢຊູ, ທັດສະນະຂອງເຂົາກ່ຽວກັບຄົນຕ່າງຊາດ ແລະ ການອອກນອກທີດນອກທາງ ແລະ ຄວາມຜິດພາດອື່ນໆຂອງເຂົາຈະໄດ້ຮັບການແກ້ໄຂໃຫ້ຖືກຕ້ອງ. ແລ້ວມະນຸດຈະເຂົ້າໃຈເສັ້ນທາງແຫ່ງຊີວິດທີ່ຖືກຕ້ອງທັງໝົດ ແລະ ພາລະກິດທັງໝົດທີ່ພຣະເຈົ້າປະຕິບັດ ແລະ ຄວາມຈິງທັງໝົດ. ເມື່ອສິ່ງນັ້ນເກີດຂຶ້ນ, ພາລະກິດຂັ້ນຕອນນີ້ກໍຈະມາເຖິງຈຸດສິ້ນສຸດ. ພາລະກິດຂອງພຣະເຢໂຮວາແມ່ນການສ້າງແຜ່ນດິນໂລກ, ມັນຄືຈຸດເລີ່ມຕົ້ນ; ພາລະກິດຂັ້ນຕອນນີ້ແມ່ນຈຸດສິ້ນສຸດຂອງພາລະກິດ ແລະ ມັນແມ່ນບົດສະຫຼຸບ. ໃນຕອນເລີ່ມຕົ້ນ, ພາລະກິດຂອງພຣະເຈົ້າຖືກປະຕິບັດທ່າມກາງປະຊາຊົນທີ່ຖືກເລືອກແຫ່ງອິດສະຣາເອນ ແລະ ມັນແມ່ນຈຸດເລີ່ມຕົ້ນຂອງຍຸກໃໝ່ໃນສະຖານທີ່ສັກສິດທີ່ສຸດ. ພາລະກິດຂັ້ນຕອນສຸດທ້າຍແມ່ນຖືກປະຕິບັດໃນບັນດາປະເທດທີ່ບໍ່ບໍລິສຸດ

ທີ່ສຸດ, ເພື່ອພິພາກສາໂລກ ແລະ ນຳຍຸກດັ່ງກ່າວມາເຖິງຈຸດສິ້ນສຸດ. ໃນຂັ້ນຕອນທຳອິດ, ພາລະກິດຂອງພຣະເຈົ້າຖືກປະຕິບັດໃນສະຖານທີ່ໆສະຫວ່າງທີ່ສຸດ ແລະ ຂັ້ນຕອນສຸດທ້າຍແມ່ນຖືກປະຕິບັດໃນສະຖານທີ່ໆມືດມົນທີ່ສຸດ ແລະ ຄວາມມືດກໍຈະຖືກຂັບໄລ່ອອກໄປ, ແສງສະຫວ່າງກໍ່ສ່ອງເຂົ້າມາ ແລະ ທຸກຄົນກໍຈະຖືກເອົາຊະນະ. ເມື່ອຜູ້ຄົນໃນສະຖານທີ່ໆບໍ່ບໍລິສຸດ ແລະ ມືດມົນທີ່ສຸດໄດ້ຖືກເອົາຊະນະ ແລະ ປະຊາກອນທັງໝົດຮັບຮູ້ວ່າ ມີພຣະເຈົ້າ ເຊິ່ງເປັນພຣະເຈົ້າທີ່ແທ້ຈິງ ແລະ ທຸກຄົນໄດ້ເຊື່ອທັງໝົດ, ແລ້ວຄວາມຈິງນີ້ກໍຈະຖືກໃຊ້ເພື່ອປະຕິບັດພາລະກິດແຫ່ງການເອົາຊະນະທົ່ວຈັກກະວານທັງປວງ. ພາລະກິດຂັ້ນຕອນນີ້ເປັນສັນຍາລັກ ນັ້ນກໍຄື ເມື່ອພາລະກິດແຫ່ງຍຸກນີ້ສຳເລັດລົງ, ພາລະກິດແຫ່ງການຄຸ້ມຄອງ 6.000 ປີກໍຈະມາເຖິງຈຸດສິ້ນສຸດຢ່າງສົມບູນ. ເມື່ອທຸກຄົນທີ່ຢູ່ໃນສະຖານທີ່ມືດມົນທີ່ສຸດໄດ້ຖືກເອົາຊະນະ, ແນ່ນອນ ມັນກໍຈະເປັນແບບນັ້ນໃນບ່ອນອື່ນໆເຊັ່ນດຽວກັນ. ເມື່ອເປັນແນວນັ້ນ ມີພຽງພາລະກິດແຫ່ງການເອົາຊະນະໃນປະເທດຈີນເທົ່ານັ້ນທີ່ມີຄວາມໝາຍທາງສັນຍາລັກ. ປະເທດຈີນຄືຕົວຢ່າງຂອງອຳນາດແຫ່ງຄວາມມືດທັງປວງ ແລະ ປະຊາຊົນຈີນກໍເປັນຕົວແທນໃຫ້ກັບທຸກຄົນທີ່ເປັນເນື້ອໜັງ, ເປັນຊາຕານ, ເປັນເນື້ອໜັງ ແລະ ເລືອດ. ແມ່ນຄົນຈີນນີ້ເອງທີ່ຖືກມັງກອນແດງໃຫຍ່ເຮັດໃຫ້ເສື່ອມຊາມຫຼາຍທີ່ສຸດ, ຜູ້ເຊິ່ງຕໍ່ຕ້ານພຣະເຈົ້າຢ່າງໜັກໜ່ວງ, ຜູ້ເຊິ່ງມີຄວາມເປັນມະນຸດທີ່ຕໍ່າຕ້ອຍ ແລະ ບໍ່ບໍລິສຸດ ແລະ ສະນັ້ນ ພວກເຂົາຈຶ່ງເປັນແມ່ພິມຂອງບັນດາມະນຸດຊາດທີ່ເສື່ອມຊາມ. ນີ້ບໍ່ໄດ້ເວົ້າວ່າ ປະເທດອື່ນບໍ່ມີບັນຫາຫຍັງເລີຍ; ແນວຄິດຂອງມະນຸດກໍຄືກັນໝົດ ແລະ ເຖິງແມ່ນວ່າ ປະຊາຊົນໃນປະເທດເຫຼົ່ານີ້ອາດມີຄວາມສາມາດສູງ, ຖ້າພວກເຂົາບໍ່ຮູ້ຈັກພຣະເຈົ້າ, ແລ້ວມັນກໍໝາຍຄວາມວ່າ ພວກເຂົາຕໍ່ຕ້ານພຣະເຈົ້າ. ເປັນຫຍັງຊາວຢິວຈຶ່ງຕໍ່ຕ້ານ ແລະ ທ້າທາຍພຣະເຈົ້າເຊັ່ນກັນ? ເປັນຫຍັງພວກຟາຣີຊາຍຈຶ່ງຕໍ່ຕ້ານພຣະອົງເຊັ່ນກັນ? ເປັນຫຍັງຢູດາຈຶ່ງທໍລະຍົດພຣະເຢຊູ? ໃນເວລານັ້ນ, ສາວົກຫຼາຍຄົນບໍ່ໄດ້ຮູ້ຈັກພຣະເຢຊູ. ເປັນຫຍັງຫຼັງຈາກທີ່ພຣະເຢຊູຖືກຄຶງໃສ່ໄມ້ກາງແຂນ ແລະ ຟື້ນຄືນມາອີກ ຜູ້ຄົນກໍຍັງບໍ່ເຊື່ອໃນພຣະອົງ? ຄວາມບໍ່ເຊື່ອຟັງຂອງມະນຸດບໍ່ຄືກັນໝົດເລີຍບໍ? ພຽງແຕ່ວ່າ ປະຊາຊົນຈີນຖືກລົງໂທດໃຫ້ເປັນແບບຢ່າງ ແລະ ເມື່ອພວກເຂົາຖືກເອົາຊະນະ ພວກເຂົາກໍຈະກາຍເປັນແບບຢ່າງ ແລະ ຕົວຢ່າງ ແລະ ຈະເຮັດໜ້າທີ່ເປັນບ່ອນອ້າງອີງໃຫ້ກັບຄົນອື່ນໆ. ເປັນຫຍັງເຮົາຈຶ່ງເວົ້າຢູ່ສະເໝີວ່າ ພວກເຈົ້າເປັນສ່ວນປະກອບໃຫ້ກັບແຜນການຄຸ້ມຄອງຂອງເຮົາບໍ? ມັນແມ່ນຢູ່ໃນປະຊາຊົນຈີນນີ້ເອງທີ່ການເສື່ອມຊາມ, ຄວາມບໍ່ບໍລິສຸດ, ຄວາມບໍ່ຊອບທຳ, ການຕໍ່ຕ້ານ ແລະ ຄວາມກະບົດຖືກສະແດງອອກຢ່າງຄົບຖ້ວນ ແລະ ຖືກເປີດເຜີຍໃນຮູບແບບຕ່າງໆນາໆ. ໃນດ້ານໜຶ່ງພວກເຂົາມີຄວາມສາມາດໜ້ອຍ ແລະ ໃນອີກດ້ານໜຶ່ງ, ຊີວິດ ແລະ ແນວຄວາມຄິດຂອງພວກເຂົາກໍຫຼ້າຫຼັງ ແລະ ນິໄສ, ສະພາບແວດລ້ອມທາງສັງຄົມ ແລະ ຄອບຄົວທີ່ໃຫ້ກຳເນີດພວກເຂົາ, ທຸກສິ່ງນັ້ນແມ່ນບໍ່ດີ ແລະ ຫຼ້າຫຼັງທີ່ສຸດ. ສະຖານະຂອງພວກເຂົາກໍຕໍ່າຕ້ອຍເຊັ່ນດຽວກັນ. ພາລະກິດໃນສະຖານທີ່ແຫ່ງນີ້ເປັນສັນຍາລັກ ແລະ ຫຼັງຈາກທີ່ພາລະກິດທົດສອບນີ້ຖືກປະຕິບັດຢ່າງຄົບຖ້ວນ, ພາລະກິດຂອງພຣະອົງທີ່ເກີດຂຶ້ນພາຍຫຼັງກໍຈະງ່າຍກວ່າ. ຖ້າບາດກ້າວນີ້ຂອງພາລະກິດສາມາດເຮັດສຳເລັດໄດ້ ແລ້ວພາລະກິດຕໍ່ມາກໍຈະດຳເນີນໄປຢ່າງແນ່ນອນ. ເມື່ອບາດກ້າວນີ້ຂອງພາລະກິດຖືກເຮັດໃຫ້ສຳເລັດລົງ,

ຄວາມສຳເລັດທີ່ຍິ່ງໃຫຍ່ກໍຈະຖືກບັນລຸຢ່າງສົມບູນ ແລະ ພາລະກິດແຫ່ງການເອົາຊະນະທົ່ວຈັກກະວານທັງປວງກໍຈະສິ້ນສຸດລົງຢ່າງສົມບູນ. ຄວາມຈິງແລ້ວ ເມື່ອພາລະກິດທ່າມກາງພວກເຈົ້າປະສົບຜົນສຳເລັດ, ສິ່ງນີ້ກໍເທົ່າກັບຄວາມສຳເລັດທົ່ວຈັກກະວານແລ້ວ. ນີ້ຄືຄວາມໝາຍທີ່ວ່າ ເປັນຫຍັງເຮົາຈຶ່ງໃຫ້ພວກເຈົ້າເຮັດໜ້າທີ່ເປັນແບບຢ່າງ ແລະ ຕົວຢ່າງ. ຄວາມກະບົດ, ການຕໍ່ຕ້ານ, ຄວາມບໍ່ບໍລິສຸດ, ຄວາມບໍ່ຊອບທຳ, ທຸກສິ່ງແມ່ນພົບເຫັນໄດ້ໃນຜູ້ຄົນເຫຼົ່ານີ້ ແລະ ຄວາມກະບົດທັງໝົດຂອງມະນຸດຊາດກໍຖືກສະແດງອອກໃນຕົວຂອງພວກເຂົາ. ພວກເຂົາຊ່າງໜ້າປະທັບໃຈແທ້ໆ. ສະນັ້ນ ພວກເຂົາຈຶ່ງຖືກຍົກຂຶ້ນໃຫ້ເປັນຕົວຢ່າງທີ່ດີທີ່ສຸດຂອງການເອົາຊະນະ ແລະ ເມື່ອພວກເຂົາຖືກເອົາຊະນະ ພວກເຂົາກໍຈະກາຍມາເປັນຕົວຢ່າງ ແລະ ແບບຢ່າງໃຫ້ກັບຄົນອື່ນໆໂດຍທຳມະຊາດ. ບໍ່ມີສິ່ງໃດທີ່ເປັນສັນຍາລັກຫຼາຍກວ່າຂັ້ນຕອນທຳອິດທີ່ຖືກປະຕິບັດໃນອິດສະຣາເອນ ນັ້ນກໍຄື ຊາວອິດສະຣາເອນເປັນຄົນທີ່ບໍລິສຸດທີ່ສຸດ ແລະ ເສື່ອມຊາມໜ້ອຍທີ່ສຸດໃນຜູ້ຄົນທັງໝົດ ແລະ ສະນັ້ນ ຈຸດເລີ່ມຕົ້ນຂອງຍຸກໃໝ່ໃນດິນແດນນີ້ແມ່ນມີຄວາມໝາຍຫຼາຍທີ່ສຸດ. ສາມາດເວົ້າໄດ້ວ່າ ບັນພະບຸລຸດຂອງມະນຸດຊາດແມ່ນມາຈາກອິດສະຣາເອນ ແລະ ອິດສະຣາເອນແມ່ນຈຸດກຳເນີດແຫ່ງພາລະກິດຂອງພຣະເຈົ້າ. ໃນຕອນເລີ່ມຕົ້ນ, ຄົນເຫຼົ່ານີ້ບໍລິສຸດທີ່ສຸດ ແລະ ພວກເຂົາທັງໝົດນະມັດສະການພຣະເຢໂຮວາ ແລະ ພາລະກິດຂອງພຣະເຈົ້າໃນພວກເຂົາກໍສາມາດເກີດຜົນຢ່າງຫຼວງຫຼາຍທີ່ສຸດ. ພຣະຄຳພີທັງໝົດບັນທຶກພາລະກິດຂອງສອງຍຸກ ນັ້ນກໍຄື ໜຶ່ງແມ່ນພາລະກິດໃນຍຸກແຫ່ງພຣະບັນຍັດ ແລະ ອີກຢ່າງໜຶ່ງແມ່ນພາລະກິດໃນຍຸກແຫ່ງພຣະຄຸນ. ພຣະສັນຍາເດີມບັນທຶກພຣະທຳຂອງພຣະເຢໂຮວາທີ່ມີຕໍ່ຊາວອິດສະຣາເອນ ແລະ ພາລະກິດຂອງພຣະອົງທີ່ຢູ່ໃນອິດສະຣາເອນ; ພຣະສັນຍາໃໝ່ບັນທຶກພາລະກິດຂອງພຣະເຢຊູທີ່ຢູ່ໃນຢູດາຍ. ແຕ່ເປັນຫຍັງພຣະຄຳພີຈຶ່ງບໍ່ມີຊື່ຈີນເລີຍ? ເພາະວ່າສອງສ່ວນທຳອິດຂອງພາລະກິດຂອງພຣະເຈົ້າແມ່ນຖືກປະຕິບັດໃນອິດສະຣາເອນ, ເພາະວ່າປະຊາຊົນອິດສະຣາເອນແມ່ນຄົນທີ່ຖືກເລືອກ, ເຊິ່ງເວົ້າໄດ້ວ່າ ພວກເຂົາແມ່ນຄົນທຳອິດທີ່ຍອມຮັບພາລະກິດຂອງພຣະເຢໂຮວາ. ພວກເຂົາເປັນຄົນທີ່ເສື່ອມຊາມໜ້ອຍທີ່ສຸດໃນບັນດາມະນຸດຊາດ ແລະ ໃນຕອນເລີ່ມຕົ້ນນັ້ນ ພວກເຂົາກໍມີຈິດໃຈທີ່ນັບຖືພຣະເຈົ້າ ແລະ ເຄົາລົບພຣະອົງ. ພວກເຂົາເຊື່ອຟັງພຣະທຳຂອງພຣະເຢໂຮວາ ແລະ ຮັບໃຊ້ໃນພຣະວິຫານຢູ່ຕະຫຼອດເວລາ ແລະ ນຸ່ງເສື້ອຄຸມ ຫຼື ສວມມົງກຸດຂອງປະໂລຫິດ. ພວກເຂົາແມ່ນຄົນກຸ່ມທຳອິດທີ່ນະມັດສະການພຣະເຈົ້າ ແລະ ເປັນເຄື່ອງມືທຳອິດໃນພາລະກິດຂອງພຣະເຈົ້າ. ຄົນເຫຼົ່ານີ້ເປັນຕົວຢ່າງ ແລະ ແບບຢ່າງໃຫ້ກັບມວນມະນຸດຊາດ. ພວກເຂົາເປັນຕົວຢ່າງ ແລະ ແບບຢ່າງຂອງຄວາມບໍລິສຸດ, ເປັນຄົນຊອບທຳ. ຄົນແບບ ໂຢບ, ອັບຣາຮາມ, ໂລດ ຫຼື ເປໂຕ ແລະ ຕີໂມທຽວ, ພວກເຂົາລ້ວນເປັນຊາວອິດສະຣາເອນ ແລະ ເປັນຕົວຢ່າງ ແລະ ແບບຢ່າງທີ່ບໍລິສຸດທີ່ສຸດ. ອິດສະຣາເອນເປັນປະເທດທຳອິດທີ່ນະມັດສະການພຣະເຈົ້າທ່າມກາງມະນຸດຊາດ ແລະ ມີຄົນທີ່ຊອບທຳມາຈາກປະເທດນີ້ຫຼາຍກວ່າຈາກບ່ອນອື່ນ. ພຣະເຈົ້າປະຕິບັດພາລະກິດໃນພວກເຂົາ ເພື່ອວ່າພຣະອົງຈະສາມາດຄຸ້ມຄອງມະນຸດທົ່ວດິນແດນໄດ້ດີຂຶ້ນໃນອະນາຄົດ. ຄວາມສຳເລັດຂອງພວກເຂົາ ແລະ ການກະທຳທີ່ຊອບທຳຊອບທຳຂອງພວກເຂົາໃນການນະມັດສະການພຣະເຢໂຮວາໄດ້ຖືກບັນທຶກໄວ້ ເພື່ອພວກເຂົາ

ຈະສາມາດເຮັດໜ້າທີ່ເປັນຕົວຢ່າງ ແລະ ແບບຢ່າງໃຫ້ກັບຜູ້ຄົນທີ່ຢູ່ນອກອິດສະຣາເອນໃນລະຫວ່າງຍຸກແຫ່ງພຣະຄຸນ; ແລ້ວການກະທຳຂອງພວກເຂົາກໍໄດ້ສະໜັບສະໜູນພາລະກິດເປັນເວລາຫຼາຍພັນປີຈົນມາເຖິງປັດຈຸບັນ.

ຫຼັງຈາກການສ້າງໂລກ, ຂັ້ນຕອນທຳອິດແຫ່ງພາລະກິດຂອງພຣະເຈົ້າຖືກປະຕິບັດໃນອິດສະຣາເອນ ແລະ ດ້ວຍເຫດນັ້ນ ອິດສະຣາເອນຈຶ່ງເປັນຈຸດກຳເນີດ ແລະ ຖານຂອງພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກ. ຂອບເຂດແຫ່ງພາລະກິດຂອງພຣະເຢຊູໄດ້ປົກຄຸມທົ່ວຢູດາຍ. ໃນລະຫວ່າງພາລະກິດຂອງພຣະອົງ, ມີພຽງຄົນສ່ວນໜ້ອຍຢູ່ນອກຢູດາຍທີ່ຮູ້ຈັກກ່ຽວກັບພາລະກິດນັ້ນ, ຍ້ອນພຣະອົງບໍ່ໄດ້ປະຕິບັດພາລະກິດນອກເໜືອຈາກຢູດາຍ. ໃນປັດຈຸບັນ, ພາລະກິດຂອງພຣະອົງໄດ້ຖືກນຳມາສູ່ປະເທດຈີນ ແລະ ມັນກໍຖືກປະຕິບັດພາຍໃນຂອບເຂດນີ້ເທົ່ານັ້ນ. ໃນລະຫວ່າງຂັ້ນຕອນນີ້, ບໍ່ມີພາລະກິດໃດທີ່ເລີ່ມຕົ້ນຂຶ້ນຢູ່ນອກປະເທດຈີນ; ການຂະຫຍາຍພາລະກິດອອກນອກປະເທດຈີນແມ່ນເປັນພາລະກິດທີ່ຈະເກີດຂຶ້ນພາຍຫຼັງ. ພາລະກິດຂັ້ນຕອນນີ້ມາຕາມຫຼັງຂັ້ນຕອນຂອງພາລະກິດຂອງພຣະເຢຊູ. ພຣະເຢຊູປະຕິບັດພາລະກິດແຫ່ງການໄຖ່ບາບ ແລະ ຂັ້ນຕອນນີ້ແມ່ນພາລະກິດທີ່ມາຕາມຫຼັງພາລະກິດດັ່ງກ່າວ; ການໄຖ່ບາບແມ່ນຖືກເຮັດໃຫ້ສຳເລັດແລ້ວ ແລະ ໃນຂັ້ນຕອນນີ້ ບໍ່ຈຳເປັນຕ້ອງມີການປະຕິສົນທິຈາກພຣະວິນຍານບໍລິສຸດ ເພາະວ່າພາລະກິດຂັ້ນຕອນນີ້ບໍ່ຄືກັນກັບຂັ້ນຕອນທີ່ຜ່ານມາ ແລະຍິ່ງໄປກວ່ານັ້ນ ເພາະວ່າປະເທດຈີນບໍ່ຄືກັນກັບປະເທດອິດສະຣາເອນ. ພຣະເຢຊູປະຕິບັດຂັ້ນຕອນໜຶ່ງຂອງພາລະກິດແຫ່ງການໄຖ່ບາບ. ມະນຸດໄດ້ເຫັນພຣະເຢຊູ ແລະ ຫຼັງຈາກນັ້ນບໍ່ດົນ ພາລະກິດຂອງພຣະອົງກໍເລີ່ມຂະຫຍາຍໄປສູ່ຊາວຕ່າງຊາດ. ໃນປັດຈຸບັນ, ມີຫຼາຍຄົນທີ່ເຊື່ອພຣະເຈົ້າໃນອາເມຣິກາ, ໃນປະເທດອັງກິດ ແລະ ຣັດເຊຍ, ແລ້ວເປັນຫຍັງຈຶ່ງມີຄົນຈຳນວນໜ້ອຍຄົນທີ່ເຊື່ອຢູ່ໃນປະເທດຈີນ? ເພາະວ່າ ປະເທດຈີນເປັນຊົນຊາດທີ່ປິດທີ່ສຸດ. ເມື່ອເປັນດັ່ງນັ້ນ, ປະເທດຈີນຈຶ່ງເປັນປະເທດສຸດທ້າຍທີ່ຍອມຮັບຫົນທາງຂອງພຣະເຈົ້າ ແລະ ແມ່ນແຕ່ໃນປັດຈຸບັນ ມັນຫາກໍເລີ່ມຍອມຮັບເປັນເວລາໜ້ອຍກວ່າຮ້ອຍປີ ເຊິ່ງຊ້າກວ່າອາເມຣິກາ ແລະ ປະເທດອັງກິດຫຼາຍ. ຂັ້ນຕອນສຸດທ້າຍຂອງພາລະກິດຂອງພຣະເຈົ້າແມ່ນຖືກປະຕິບັດໃນແຜ່ນດິນຈີນ ເພື່ອນຳພາລະກິດຂອງພຣະອົງມາສູ່ຈຸດສິ້ນສຸດ ແລະເພື່ອວ່າ ພາລະກິດທັງໝົດຂອງພຣະອົງຈະຖືກເຮັດໃຫ້ສຳເລັດລົງ. ທຸກຄົນທີ່ຢູ່ໃນອິດສະຣາເອນເອີ້ນພຣະເຢໂຮວາວ່າເປັນພຣະຜູ້ເປັນເຈົ້າຂອງພວກເຂົາ. ໃນເວລານັ້ນ, ພວກເຂົາຖືວ່າພຣະອົງເປັນຫົວໜ້າຄອບຄົວຂອງພວກເຂົາ ແລະ ອິດສະຣາເອນທັງໝົດກໍກາຍເປັນຄອບຄົວທີ່ຍິ່ງໃຫຍ່ ເຊິ່ງທຸກຄົນກໍນະມັດສະການພຣະເຢໂຮວາພຣະຜູ້ເປັນເຈົ້າຂອງພວກເຂົາ. ພຣະວິນຍານຂອງພຣະເຢໂຮວາປາກົດຕົວຕໍ່ພວກເຂົາເລື້ອຍໆ ແລະ ພຣະອົງກ່າວ ແລະ ປະກາດພຣະສຸລະສຽງຂອງພຣະອົງໃຫ້ກັບພວກເຂົາ ແລະໃຊ້ເສົາເມກ ແລະ ສຽງເພື່ອນຳພາຊີວິດຂອງພວກເຂົາ. ໃນເວລານັ້ນ, ພຣະວິນຍານຈັດກຽມການນຳພາຂອງພຣະອົງໃນອິດສະຣາເອນໂດຍກົງ, ໂດຍກ່າວ ແລະ ປະກາດພຣະສຸລະສຽງຂອງພຣະອົງຕໍ່ຜູ້ຄົນ ແລະ ພວກເຂົາກໍໄດ້ເຫັນເມກ ແລະ ໄດ້ຍິນສຽງຟ້າຮ້ອງທີ່ດັງກ້ອງກັງວານ ແລະ ພຣະອົງນຳພາຊີວິດຂອງພວກເຂົາໃນລັກສະນະນີ້ເປັນເວລາຫຼາຍພັນປີ. ສະນັ້ນ ມີພຽງແຕ່ປະຊາຊົນອິດສະຣາເອນເທົ່ານັ້ນ

ທີ່ນະມັດສະການພຣະເຢໂຮວາຢູ່ຕະຫຼອດ. ພວກເຂົາເຊື່ອວ່າ ພຣະເຢໂຮວາເປັນພຣະເຈົ້າຂອງພວກເຂົາ ແລະ ບໍ່ແມ່ນພຣະເຈົ້າຂອງຊາວຕ່າງຊາດ. ສິ່ງນີ້ບໍ່ແມ່ນເລື່ອງແປກໃຈເລີຍ: ເພາະວ່າ ພຣະເຢໂຮວາ ປະຕິບັດພາລະກິດທ່າມກາງພວກເຂົາເປັນເວລາເກືອບ 4.000 ປີ. ໃນແຜ່ນດິນຈີນ, ຫຼັງຈາກທີ່ນອນ ຫຼັບເປັນເວລາຫຼາຍພັນປີ, ມີພຽງແຕ່ຕອນນີ້ເທົ່ານັ້ນທີ່ຄົນເສື່ອມຊາມໄດ້ມາຮູ້ຈັກວ່າ ສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງບໍ່ໄດ້ເກີດຂຶ້ນໂດຍທຳມະຊາດ, ແຕ່ຖືກສ້າງຂຶ້ນໂດຍພຣະຜູ້ສ້າງ. ຍ້ອນຂ່າວປະເສີດນີ້ມາຈາກຕ່າງຖິ່ນ, ຄົນທີ່ມີຄວາມຄິດແບບສັກດິນາ ແລະ ປະຕິການເຊື່ອວ່າ ທຸກຄົນ ທີ່ຍອມຮັບເອົາຂ່າວປະເສີດນີ້ແມ່ນພວກຂາຍຊາດ, ພວກເຂົາແມ່ນຄົນຊົ່ວທີ່ທໍລະຍົດພຣະພຸດທະເຈົ້າ ເຊິ່ງເປັນບັນພະບຸລຸດຂອງພວກເຂົາ. ຍິ່ງໄປກວ່ານັ້ນ ຫຼາຍຄົນທີ່ມີຄວາມຄິດແບບສັກດິນາຖາມວ່າ "ປະຊາຊົນຈີນຈະເຊື່ອໃນພຣະເຈົ້າຂອງຊາວຕ່າງຊາດໄດ້ແນວໃດ? ພວກເຂົາບໍ່ໄດ້ທໍລະຍົດຕໍ່ບັນພະບຸລຸດ ຂອງພວກເຂົາບໍ? ພວກເຂົາບໍ່ແມ່ນກຳລັງເຮັດສິ່ງທີ່ຊົ່ວຮ້າຍບໍ?" ໃນປັດຈຸບັນ, ຜູ້ຄົນໄດ້ລືມໄປດົນ ແລ້ວວ່າ ພຣະເຢໂຮວາເປັນພຣະເຈົ້າຂອງພວກເຂົາ. ພວກເຂົາໄດ້ຍູ້ພຣະຜູ້ສ້າງໄປໄວ້ດ້ານຫຼັງຈິດໃຈ ຂອງພວກເຂົາດົນນານມາແລ້ວ ແລະ ພວກເຂົາກໍພາກັນເຊື່ອໃນດ້ານວິວັດທະນາການແທນ ເຊິ່ງໝາຍ ຄວາມວ່າ ມະນຸດໄດ້ວິວັດທະນາການມາຈາກທະນີ ແລະ ໂລກແຫ່ງທຳມະຊາດແມ່ນເກີດຂຶ້ນດ້ວຍໂຕ ມັນເອງ. ອາຫານທຸກຢ່າງດີໆທີ່ມະນຸດຊາດໄດ້ຮັບແມ່ນຖືກຈັດກຽມໃຫ້ໂດຍທຳມະຊາດ, ມີກົດເກນ ແຫ່ງຊີວິດ ແລະ ຄວາມຕາຍຂອງມະນຸດ ແລະ ບໍ່ມີພຣະເຈົ້າທີ່ປົກຄອງເໜືອທຸກສິ່ງທຸກຢ່າງ. ຍິ່ງໄປ ກວ່ານັ້ນ, ມີຜູ້ບໍ່ເຊື່ອວ່າມີພຣະເຈົ້າຫຼາຍຄົນທີ່ເຊື່ອວ່າ ພຣະເຈົ້າຜູ້ເຊິ່ງປົກຄອງເໜືອທຸກສິ່ງທຸກຢ່າງ ແມ່ນເປັນຄວາມເຊື່ອແບບງົມງວາຍ ແລະ ບໍ່ແມ່ນວິທະຍາສາດ. ແຕ່ວິທະຍາສາດສາມາດທົດແທນ ພາລະກິດຂອງພຣະເຈົ້າໄດ້ບໍ? ວິທະຍາສາດສາມາດປົກຄອງເໜືອມະນຸດຊາດໄດ້ບໍ? ການເທດສະໜາ ຂ່າວປະເສີດໃນປະເທດທີ່ຖືກປົກຄອງໂດຍລັດທິເທວະນິຍົມບໍ່ແມ່ນວຽກງານທີ່ງ່າຍເລີຍ ແລະ ປະກອບ ດ້ວຍອຸປະສັກຢ່າງຫຼວງຫຼາຍ. ໃນປັດຈຸບັນ ບໍ່ໄດ້ມີຫຼາຍຄົນທີ່ຕໍ່ຕ້ານພຣະເຈົ້າໃນລັກສະນະນີ້ບໍ?

ເມື່ອພຣະເຢຊູສະເດັດມາປະຕິບັດພາລະກິດຂອງພຣະອົງ, ມີຫຼາຍຄົນປຽບທຽບພາລະກິດຂອງ ພຣະອົງໃສ່ພາລະກິດຂອງພຣະເຢໂຮວາ ແລະ ເມື່ອພວກເຂົາພົບຄວາມບໍ່ສອດຄ່ອງກັນ ພວກເຂົາກໍຄຶງ ພຣະເຢຊູໃສ່ໄມ້ກາງແຂນ. ແຕ່ເປັນຫຍັງພວກເຂົາຈຶ່ງພົບຄວາມບໍ່ສອດຄ່ອງກັນລະຫວ່າງພາລະກິດ ຂອງພຣະເຢຊູ ແລະ ພຣະເຢໂຮວາ? ສ່ວນໜຶ່ງກໍຍ້ອນວ່າ ພຣະເຢຊູປະຕິບັດພາລະກິດໃໝ່ ແລະ ອີກສ່ວນກໍເປັນຍ້ອນວ່າ ກ່ອນທີ່ພຣະເຢຊູເລີ່ມຕົ້ນພາລະກິດຂອງພຣະອົງ, ບໍ່ມີໃຜຂຽນກ່ຽວກັບ ລຳດັບເຊື້ອວົງຕະກຸນຂອງພຣະອົງ. ມັນຈະເປັນການດີຖ້າຄົນໃດຄົນໜຶ່ງໄດ້ຂຽນໄວ້ ແມ່ນໃຜທີ່ຈະຍັງ ຄຶງພຣະເຢຊູໃສ່ໄມ້ກາງແຂນ? ຖ້າມັດທາຍໄດ້ຂຽນກ່ຽວກັບລຳດັບເຊື້ອວົງຕະກຸນຂອງພຣະເຢຊູເປັນ ເວລາຫຼາຍສິບປີກ່ອນໜ້ານັ້ນ ແລ້ວພຣະເຢຊູກໍຈະບໍ່ໄດ້ທົນທຸກກັບການຂົ່ມເຫັງຢ່າງຮຸນແຮງດັ່ງກ່າວ. ມັນບໍ່ແມ່ນແບບນັ້ນບໍ? ທັນທີທີ່ຜູ້ຄົນໄດ້ອ່ານກ່ຽວກັບວົງຕະກຸນຂອງພຣະເຢຊູ ວ່າພຣະອົງເປັນບຸດ ຊາຍຂອງອັບຣາຮາມ ແລະ ເຊື້ອວົງຂອງເດວິດ, ແລ້ວພວກເຂົາກໍຈະເຊົາຂົ່ມເຫັງພຣະອົງ. ມັນບໍ່ໜ້າ ເສຍດາຍບໍທີ່ລຳດັບວົງຕະກຸນຂອງພຣະອົງຖືກຂຽນຊ້າເກີນໄປ? ເປັນເລື່ອງທີ່ໜ້າເສຍດາຍທີ່ພຣະຄຳພີ

ພຽງແຕ່ບັນທຶກສອງຂັ້ນຕອນຂອງພາລະກິດຂອງພຣະເຈົ້າເທົ່ານັ້ນ ນັ້ນກໍຄື ຂັ້ນຕອນໜຶ່ງແມ່ນພາລະກິດໃນຍຸກແຫ່ງພຣະບັນຍັດ ແລະ ອີກຂັ້ນຕອນແມ່ນພາລະກິດໃນຍຸກແຫ່ງພຣະຄຸນ; ໜຶ່ງຂັ້ນຕອນແມ່ນພາລະກິດຂອງພຣະເຢໂຮວາ ແລະ ອີກໜຶ່ງຂັ້ນຕອນແມ່ນພາລະກິດຂອງພຣະເຢຊູ. ມັນຈະດີຫຼາຍພຽງໃດຖ້າຫາກຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ໄດ້ທຳນາຍເຖິງພາລະກິດແຫ່ງປັດຈຸບັນ. ມັນກໍຈະມີພາກສ່ວນເພີ່ມເຕີມໃນພຣະຄຳພີ ທີ່ຊື່ວ່າ "ພາລະກິດແຫ່ງຍຸກສຸດທ້າຍ", ນັ້ນຈະບໍ່ດີກວ່າບໍ? ເປັນຫຍັງມະນຸດຈຶ່ງຕ້ອງປະສົບກັບຄວາມຍາກລຳບາກຫຼາຍຢ່າງໃນປັດຈຸບັນ? ພວກເຈົ້າມີຄວາມຍຸ້ງຍາກຫຼາຍ! ຖ້າຄົນໃດຄົນໜຶ່ງສົມຄວນຖືກກຽດຊັງ, ຄົນນັ້ນກໍຈະເປັນເອຊາຢາ ແລະ ດານີເອັນ ຍ້ອນພວກເຂົາບໍ່ໄດ້ທຳນາຍເຖິງພາລະກິດແຫ່ງຍຸກສຸດທ້າຍ ແລະ ຖ້າຕ້ອງໂທດຄົນໃດຄົນໜຶ່ງ, ຄົນນັ້ນກໍຈະເປັນພວກສາວົກໃນພຣະສັນຍາໃໝ່ ຜູ້ທີ່ບໍ່ໄດ້ບັນທຶກກ່ຽວກັບລຳດັບວົງຕະກຸນຂອງການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າກ່ອນໜ້ານັ້ນ. ເປັນຕາເສຍໃຈແທ້ເດ! ພວກເຈົ້າຕ້ອງຄົ້ນຫາຫຼັກຖານຈາກທຸກແຫ່ງ ແລະ ຍິ່ງໄປກວ່ານັ້ນ ຫຼັງຈາກທີ່ຄົ້ນພົບເສດສ່ວນໜຶ່ງຂອງພຣະທຳບາງຂໍ້ ພວກເຈົ້າກໍບໍ່ສາມາດບອກໄດ້ວ່າ ພວກມັນເປັນເຄື່ອງພິສູດແທ້ຈິງ ຫຼື ບໍ. ເປັນຕາອັບອາຍແທ້ເດ! ເປັນຫຍັງພຣະເຈົ້າຈຶ່ງລຶກລັບຫຼາຍໃນພາລະກິດຂອງພຣະອົງ? ໃນປັດຈຸບັນ, ຫຼາຍຄົນຍັງບໍ່ໄດ້ຄົ້ນພົບຫຼັກຖານທີ່ເຊື່ອຖືໄດ້ ແຕ່ພວກເຂົາກໍບໍ່ສາມາດປະຕິເສດສິ່ງນັ້ນໄດ້. ສະນັ້ນ ພວກເຂົາຄວນເຮັດແນວໃດ? ພວກເຂົາບໍ່ສາມາດຕິດຕາມພຣະເຈົ້າຢ່າງເດັດຂາດ, ແຕ່ພວກເຂົາກໍບໍ່ສາມາດກ້າວໄປຂ້າງໜ້າພ້ອມກັບຄວາມສົງໄສເຊັ່ນກັນ. ດ້ວຍເຫດນັ້ນ "ຜູ້ຊ່ຽວຊານທີ່ສະຫຼາດ ແລະ ມີພອນສະຫວັນ" ຫຼາຍຄົນຈຶ່ງມີທັດສະນະຄະຕິທີ່ວ່າ "ລອງ ແລະ ເບິ່ງ" ເມື່ອພວກເຂົາຕິດຕາມພຣະເຈົ້າ. ນີ້ຄືບັນຫາອັນໃຫຍ່ຫຼວງ! ທຸກສິ່ງທຸກຢ່າງຈະບໍ່ງ່າຍຂຶ້ນບໍ ຖ້າມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນສາມາດທຳນາຍອະນາຄົດໄດ້? ມັນຈະດີກວ່າຖ້າໂຢຮັນໄດ້ເຫັນຄວາມຈິງພາຍໃນກ່ຽວກັບຊີວິດໃນອານາຈັກ, ມັນເປັນຕາເສຍດາຍທີ່ລາວເຫັນພຽງແຕ່ນິມິດ ແລະ ບໍ່ໄດ້ເຫັນພາລະກິດທີ່ແທ້ຈິງ ແລະ ເປັນຈິງເທິງແຜ່ນດິນໂລກ. ເປັນຕາອັບອາຍແທ້ເດ! ເກີດຫຍັງຂຶ້ນກັບພຣະເຈົ້າ? ເປັນຫຍັງຫຼັງຈາກທີ່ພາລະກິດຂອງພຣະອົງດຳເນີນໄປດ້ວຍດີໃນອິດສະຣາເອນ, ພຣະອົງຈຶ່ງສະເດັດມາສູ່ປະເທດຈີນ ແລະ ເປັນຫຍັງພຣະອົງຈຶ່ງຕ້ອງກາຍມາເປັນເນື້ອໜັງ ແລະ ປະຕິບັດພາລະກິດດ້ວຍຕົວພຣະອົງເອງ ແລະ ດຳລົງຊີວິດທ່າມກາງຜູ້ຄົນ? ພຣະເຈົ້າບໍ່ຄຳນຶງເຖິງມະນຸດເລີຍ! ບໍ່ພຽງແຕ່ພຣະອົງບໍ່ບອກໃຫ້ຜູ້ຄົນຮູ້ລ່ວງໜ້າເທົ່ານັ້ນ, ແຕ່ພຣະອົງຍັງໄດ້ນຳການຂ້ຽນຕີ ແລະ ການພິພາກສາຂອງພຣະອົງມາໃນທັນທີທັນໃດ. ມັນບໍ່ມີເຫດຜົນແທ້ໆ! ຄັ້ງທຳອິດທີ່ພຣະເຈົ້າກາຍມາເປັນມະນຸດ, ພຣະອົງທົນທຸກຕໍ່ຄວາມຍາກລຳບາກຫຼາຍ ເຊິ່ງເປັນຜົນມາຈາກການບໍ່ບອກມະນຸດລ່ວງໜ້າກ່ຽວກັບຄວາມຈິງພາຍໃນທັງໝົດ. ແນ່ນອນ ພຣະອົງຄົງບໍ່ສາມາດລືມສິ່ງນັ້ນໄດ້ ແມ່ນບໍ? ແລ້ວເປັນຫຍັງພຣະອົງຈຶ່ງບໍ່ບອກມະນຸດອີກໃນຄັ້ງນີ້? ໃນປັດຈຸບັນ, ຊ່າງເປັນເລື່ອງທີ່ໂຊກບໍ່ດີແທ້ໆທີ່ມີໜັງສືຫົກສິບຫົກເຫຼັ້ມໃນພຣະຄຳພີ. ມັນຕ້ອງມີອີກໜຶ່ງເຫຼັ້ມເພື່ອທຳນາຍພາລະກິດແຫ່ງຍຸກສຸດທ້າຍ! ເຈົ້າຄິດວ່າບໍ່? ແມ່ນແຕ່ພຣະເຢໂຮວາ, ເອຊາຢາ ແລະ ເດວິດກໍບໍ່ໄດ້ກ່າວເຖິງພາລະກິດແຫ່ງປັດຈຸບັນ. ຍິ່ງໄປກວ່ານັ້ນ ພວກເຂົາຖືກລົບອອກຈາກປັດຈຸບັນ ເຊິ່ງເປັນ

ເວລາທີ່ຫ່າງກັນຫຼາຍກວ່າ 4.000 ປີ. ພຣະເຢຊູກໍບໍ່ໄດ້ທຳນາຍເຖິງພາລະກິດແຫ່ງປັດຈຸບັນຢ່າງສົມບູນ, ພຽງແຕ່ກ່າວເຖິງໜ້ອຍດຽວ ແລະ ມະນຸດກໍຍັງບໍ່ຄົ້ນພົບຫຼັກຖານທີ່ພຽງພໍ. ຖ້າເຈົ້າປຽບທຽບພາລະກິດແຫ່ງປັດຈຸບັນກັບພາລະກິດຜ່ານມາ, ທັງສອງພາລະກິດຈະສອດຄ່ອງກັນໄດ້ແນວໃດ? ພາລະກິດຂັ້ນຕອນຂອງພຣະເຢໂຮວາແມ່ນແນໃສ່ອິດສະຣາເອນ ສະນັ້ນ ຖ້າເຈົ້າປຽບທຽບພາລະກິດແຫ່ງປັດຈຸບັນກັບພາລະກິດນັ້ນ ກໍຈະມີສິ່ງທີ່ບໍ່ສອດຄ່ອງກັນຫຼາຍພໍສົມຄວນ; ບໍ່ສາມາດປຽບທຽບທັງສອງພາລະກິດໃສ່ກັນໄດ້. ເຈົ້າກໍບໍ່ສາມາດປຽບທຽບກັບອິດສະຣາເອນ ຫຼື ຊາວຢິວໄດ້ເຊັ່ນກັນ; ຄວາມສາມາດຂອງເຈົ້າ ແລະ ທຸກຢ່າງກ່ຽວກັບຕົວເຈົ້າແມ່ນຂາດເຂີນ ແລ້ວເຈົ້າຈະປຽບທຽບເຈົ້າເອງກັບພວກເຂົາໄດ້ແນວໃດ? ມັນເປັນໄປໄດ້ບໍ? ໃຫ້ຮູ້ວ່າ ປັດຈຸບັນນີ້ແມ່ນຍຸກແຫ່ງອານາຈັກ ແລະ ມັນກໍແຕກຕ່າງຈາກຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນ. ຢ່າງໃດກໍຕາມ ຢ່າພະຍາຍາມ ແລະ ນຳໃຊ້ສູດໃດສູດໜຶ່ງເລີຍ; ພຣະເຈົ້າບໍ່ໄດ້ຢູ່ໃນສູດດັ່ງກ່າວ.

ພຣະເຢຊູດຳລົງຊີວິດເປັນເວລາ 29 ປີຫຼັງຈາກການບັງເກີດຂອງພຣະອົງໄດ້ແນວໃດ? ພຣະຄຳພີບໍ່ໄດ້ບັນທຶກຫຍັງເລີຍກ່ຽວກັບໄວເດັກ ແລະ ໄວໜຸ່ມຂອງພຣະອົງ; ເຈົ້າຮູ້ບໍ່ວ່າທັງສອງໄວເປັນຄືແນວໃດ? ເປັນໄປໄດ້ບໍວ່າ ພຣະອົງບໍ່ມີໄວເດັກ ຫຼື ໄວໜຸ່ມ ແລະ ເມື່ອພຣະອົງກຳເນີດ ພຣະອົງແມ່ນມີອາຍຸ 30 ປີເລີຍ? ເຈົ້າຮູ້ໜ້ອຍເກີນໄປ, ສະນັ້ນ ຢ່າໄດ້ປະໝາດໃນການສະແດງທັດສະນະຂອງເຈົ້າ. ມັນບໍ່ໄດ້ສິ່ງຜົນດີໃຫ້ກັບເຈົ້າເລີຍ! ພຣະຄຳພີພຽງແຕ່ບັນທຶກວ່າ ກ່ອນພຣະເຢຊູມີອາຍຸ 30 ປີ, ພຣະອົງໄດ້ຮັບບັບຕິດສະມາ ແລະ ຖືກນຳພາໂດຍພຣະວິນຍານບໍລິສຸດໄປໃນຖິ່ນກັນດານເພື່ອປະສົບກັບການທົດລອງຈາກມານຮ້າຍ. ແລ້ວພຣະກິດຕິຄຸນທັງສີ່ກໍບັນທຶກພາລະກິດໃນເວລາສາມປີເຄິ່ງຂອງພຣະອົງ. ບໍ່ມີການບັນທຶກກ່ຽວກັບໄວເດັກ ແລະ ໄວໜຸ່ມຂອງພຣະອົງ, ແຕ່ນັ້ນກໍບໍ່ໄດ້ພິສູດວ່າ ພຣະອົງບໍ່ມີໄວເດັກ ແລະ ໄວໜຸ່ມ; ມັນເປັນພຽງແຕ່ວ່າ ໃນຈຸດເລີ່ມຕົ້ນ ພຣະອົງບໍ່ໄດ້ປະຕິບັດພາລະກິດຫຍັງເລີຍ ແລະ ເປັນບຸກຄົນທຳມະດາ. ແລ້ວເຈົ້າສາມາດເວົ້າໄດ້ບໍ່ວ່າ ພຣະອົງດຳລົງຊີວິດເປັນເວລາ 33 ປີ ໂດຍປາສະຈາກໄວໜຸ່ມ ຫຼື ໄວເດັກ? ຢູ່ຊື່ໆ ພຣະອົງກໍມີອາຍຸ 33 ປີເຄິ່ງໂລດບໍ? ທຸກສິ່ງທີ່ມະນຸດຄິດກ່ຽວກັບພຣະອົງແມ່ນເປັນເລື່ອງທີ່ເໜືອທຳມະຊາດ ແລະ ບໍ່ມີຄວາມເປັນຈິງ! ແນ່ນອນວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດປະກອບດ້ວຍຄວາມເປັນມະນຸດທຳມະດາ ແລະ ປົກກະຕິ, ແຕ່ເມື່ອພຣະອົງປະຕິບັດພາລະກິດຂອງພຣະອົງ ມັນແມ່ນດ້ວຍຄວາມເປັນມະນຸດທີ່ບໍ່ສົມບູນ ແລະ ຄວາມເປັນພຣະເຈົ້າທີ່ສົມບູນຂອງພຣະອົງໂດຍກົງ. ຍ້ອນສິ່ງນີ້ ຜູ້ຄົນຈຶ່ງສົງໄສກ່ຽວກັບພາລະກິດໃນປັດຈຸບັນ ແລະ ຍິ່ງສົງໄສກ່ຽວກັບພາລະກິດຂອງພຣະເຢຊູ. ເຖິງແມ່ນວ່າພາລະກິດຂອງພຣະເຈົ້າແຕກຕ່າງກັນໃນສອງຄັ້ງທີ່ພຣະອົງກາຍມາເປັນເນື້ອໜັງ, ແຕ່ແກ່ນແທ້ຂອງພຣະອົງບໍ່ໄດ້ແຕກຕ່າງເລີຍ. ແນ່ນອນ ຖ້າເຈົ້າອ່ານການບັນທຶກໃນພຣະກິດຕິຄຸນທັງສີ່, ຄວາມແຕກຕ່າງກໍຈະມີຫຼາຍ. ເຈົ້າສາມາດຫວນຄືນສູ່ຊີວິດຂອງພຣະເຢຊູໃນລະຫວ່າງໄວເດັກ ແລະ ໄວໜຸ່ມຂອງພຣະອົງໄດ້ແນວໃດ? ເຈົ້າສາມາດເຂົ້າໃຈເຖິງຄວາມເປັນມະນຸດທີ່ປົກກະຕິຂອງພຣະເຢຊູບໍ? ບາງເທື່ອ ເຈົ້າອາດມີຄວາມເຂົ້າໃຈຢ່າງໜັກແໜ້ນກ່ຽວກັບຄວາມເປັນມະນຸດຂອງພຣະເຈົ້າໃນປັດຈຸບັນ, ແຕ່ເຈົ້າບໍ່ເຂົ້າໃຈເຖິງຄວາມເປັນມະນຸດຂອງ

ພຣະເຢຊູ, ແຮງໄກທີ່ເຈົ້າຈະເຂົ້າໃຈຄວາມເປັນມະນຸດ. ຖ້າບໍ່ມີການບັນທຶກໂດຍມັດທາຍ, ເຈົ້າກໍ ຈະບໍ່ມີວີ່ແວວກ່ຽວກັບຄວາມເປັນມະນຸດຂອງພຣະເຢຊູເລີຍ. ບາງເທື່ອ ເມື່ອເຮົາບອກເຈົ້າກ່ຽວກັບ ເລື່ອງລາວຂອງພຣະເຢຊູໃນລະຫວ່າງຊີວິດຂອງພຣະອົງ ແລະ ບອກເຈົ້າກ່ຽວກັບຄວາມຈິງພາຍໃນ ກ່ຽວກັບໄວເດັກ ແລະ ໄວໜຸ່ມຂອງພຣະເຢຊູ, ເຈົ້າກໍຈະແກວ່ງຫົວ ແລ້ວເວົ້າວ່າ "ບໍ່ແມ່ນ! ພຣະອົງບໍ່ ໄດ້ເປັນແບບນັ້ນ. ພຣະອົງບໍ່ສາມາດມີຄວາມອ່ອນແອໄດ້ ແຮງໄກທີ່ພຣະອົງຈະມີຄວາມເປັນມະນຸດ!" ຍິ່ງໄປກວ່ານັ້ນ ເຈົ້າຈະຮ້ອງຂຶ້ນ ແລະ ໂວຍວາຍ. ນັ້ນກໍຍ້ອນວ່າ ເຈົ້າບໍ່ເຂົ້າໃຈພຣະເຢຊູ ເຈົ້າຈຶ່ງມີ ແນວຄິດກ່ຽວກັບເຮົາ. ເຈົ້າເຊື່ອວ່າພຣະເຢຊູສັກສິດຫຼາຍ ແລະ ພຣະອົງບໍ່ມີຫຍັງກ່ຽວຂ້ອງກັບຝ່າຍ ເນື້ອໜັງ. ແຕ່ຄວາມຈິງກໍຄືຄວາມຈິງ. ບໍ່ມີໃຜປາຖະໜາທີ່ຈະເວົ້າທ້າທາຍຄວາມເປັນຈິງແຫ່ງ ຄວາມຈິງ, ຍ້ອນວ່າ ເມື່ອເຮົາເວົ້າອອກໄປ ມັນກໍກ່ຽວພັນກັບຄວາມຈິງ; ມັນບໍ່ແມ່ນການຄາດເດົາ ຫຼື ເປັນການທຳນາຍ. ໃຫ້ຮູ້ວ່າ ພຣະເຈົ້າສາມາດລຸກຂຶ້ນຢ່າງສູງ ແລະ ຍິ່ງໄປກວ່ານັ້ນ ພຣະອົງກໍສາມາດລີ້ ໄດ້ຢ່າງເລິກ. ພຣະອົງບໍ່ແມ່ນສິ່ງທີ່ເຈົ້າຄິດຂຶ້ນ້ອງໃນໃຈຂອງເຈົ້າ ນັ້ນກໍ່ຄື ພຣະອົງເປັນພຣະເຈົ້າຂອງສິ່ງ ຊົງສ້າງທັງປວງ, ບໍ່ແມ່ນພຣະເຈົ້າສ່ວນຕົວທີ່ບຸກຄົນໃດໜຶ່ງຄິດຂຶ້ນເອງ.

# ນິມິດແຫ່ງພາລະກິດຂອງພຣະເຈົ້າ (3)

ຄັ້ງທຳອິດທີ່ພຣະເຈົ້າກາຍມາເປັນມະນຸດແມ່ນຜ່ານການປະຕິສົນທິໂດຍພຣະວິນຍານບໍລິສຸດ ແລະ ສິ່ງນີ້ກ່ຽວພັນກັບພາລະກິດທີ່ພຣະອົງຕັ້ງໃຈຈະເຮັດ. ຍຸກແຫ່ງພຣະຄຸນເລີ່ມຕົ້ນດ້ວຍພຣະນາມຂອງພຣະເຢຊູ. ເມື່ອພຣະເຢຊູເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ, ພຣະວິນຍານບໍລິສຸດກໍເລີ່ມຕົ້ນເປັນພະຍານໃຫ້ກັບພຣະນາມຂອງພຣະເຢຊູ ແລະ ພຣະນາມຂອງພຣະເຢໂຮວາແມ່ນບໍ່ໄດ້ກ່າວເຖິງອີກຕໍ່ໄປ; ກົງກັນຂ້າມ, ພຣະວິນຍານບໍລິສຸດໄດ້ຮັບພາລະກິດໃໝ່ພາຍໃຕ້ພຣະນາມຂອງພຣະເຢຊູເປັນຫຼັກ. ຄຳພະຍານຂອງຄົນທີ່ເຊື່ອໃນພຣະອົງແມ່ນສຳລັບພຣະເຢຊູຄຣິດ ແລະ ພາລະກິດທີ່ພວກເຂົາກະທຳກໍແມ່ນເພື່ອພຣະເຢຊູຄຣິດ. ການສິ້ນສຸດຂອງພຣະສັນຍາເດີມໃນຍຸກແຫ່ງພຣະບັນຍັດໝາຍຄວາມວ່າ ພາລະກິດທີ່ຖືກປະຕິບັດພາຍໃຕ້ພຣະນາມຂອງພຣະເຢໂຮວາເປັນຫຼັກນັ້ນໄດ້ສິ້ນສຸດລົງແລ້ວ. ຕັ້ງແຕ່ນີ້ເປັນຕົ້ນໄປ ພຣະນາມຂອງພຣະເຈົ້າກໍຈະບໍ່ແມ່ນພຣະເຢໂຮວາອີກຕໍ່ໄປ; ກົງກັນຂ້າມພຣະອົງຈະຖືກເອີ້ນວ່າ ພຣະເຢຊູ ແລະ ຈາກນີ້ເປັນຕົ້ນໄປ ພຣະວິນຍານບໍລິສຸດກໍເລີ່ມຕົ້ນພາລະກິດພາຍໃຕ້ພຣະນາມຂອງພຣະເຢຊູເປັນຫຼັກ. ສະນັ້ນ ຫຼາຍຄົນທີ່ຍັງກິນ ແລະ ດື່ມພຣະທຳຂອງພຣະເຢໂຮວາ ແລະ ຍັງຄົງປະຕິບັດທຸກສິ່ງຕາມພາລະກິດໃນຍຸກແຫ່ງພຣະບັນຍັດ, ເຈົ້າບໍ່ໄດ້ຫຼັບຫູຫຼັບຕາປະຕິບັດຕາມກົດລະບຽບບໍ? ເຈົ້າບໍ່ໄດ້ຍຶດຕິດຢູ່ໃນອະດີດບໍ? ບັດນີ້ ພວກເຈົ້າຮູ້ວ່າ ຍຸກສຸດທ້າຍໄດ້ມາເຖິງແລ້ວ. ເປັນໄປໄດ້ບໍ່ວ່າ ເມື່ອພຣະເຢຊູກັບມາ, ພຣະອົງຍັງຈະຖືກເອີ້ນວ່າ ພຣະເຢຊູ? ພຣະເຢໂຮວາບອກກັບປະຊາຊົນອິດສະຣາເອນວ່າ ພຣະເມຊີອາຈະກັບມາ ແລະ ເຖິງຢ່າງໃດກໍຕາມ ເມື່ອພຣະອົງກັບມາ ພຣະອົງກໍຈະບໍ່ຖືກເອີ້ນວ່າ ພຣະເມຊີອາ ແຕ່ແມ່ນພຣະເຢຊູ. ພຣະເຢຊູກ່າວວ່າ ພຣະອົງຈະກັບມາອີກຄັ້ງ ແລະ ພຣະອົງຈະມາເໝືອນກັບທີ່ພຣະອົງໄດ້ຈາກໄປ. ສິ່ງເຫຼົ່ານີ້ແມ່ນພຣະທຳຂອງພຣະເຢຊູ, ແຕ່ເຈົ້າໄດ້ເຫັນເຖິງວິທີທີ່ພຣະເຢຊູຈາກໄປບໍ? ພຣະເຢຊູຈາກໄປໂດຍຂີ່ເມກສີຂາວ, ແຕ່ເປັນໄປໄດ້ບໍວ່າ ພຣະອົງຈະກັບຄືນມາທ່າມກາງມະນຸດເທິງເມກສີຂາວ? ຖ້າເປັນແບບນັ້ນ, ພຣະອົງກໍຈະບໍ່ຖືກເອີ້ນວ່າ ພຣະເຢຊູອີກຢູ່ບໍ? ເມື່ອພຣະເຢຊູກັບມາອີກຄັ້ງ, ຍຸກກໍຈະຖືກປ່ຽນແປງແລ້ວ, ສະນັ້ນພຣະອົງຍັງຈະຖືກເອີ້ນວ່າ ພຣະເຢຊູໄດ້ແນວໃດ? ເປັນຍ້ອນວ່າ ພຣະເຈົ້າສາມາດຮູ້ຈັກພຽງແຕ່ໃນນາມຂອງພຣະເຢຊູເທົ່ານັ້ນບໍ? ພຣະອົງບໍ່ສາມາດຖືກເອີ້ນໂດຍພຣະນາມອື່ນໃນຍຸກໃໝ່ບໍ? ລັກສະນະຂອງບຸກຄົນໜຶ່ງ ແລະ ຊື່ຂອງບຸກຄົນໃດໜຶ່ງສາມາດເປັນຕົວແທນທັງໝົດໃຫ້ກັບພຣະເຈົ້າໄດ້ບໍ? ໃນແຕ່ລະຍຸກ, ພຣະເຈົ້າໄດ້ປະຕິບັດພາລະກິດໃໝ່ ແລະ ຖືກເອີ້ນໂດຍພຣະນາມໃໝ່; ພຣະອົງຈະສາມາດປະຕິບັດພາລະກິດເກົ່າໆໃນຍຸກທີ່ແຕກຕ່າງກັນໄດ້ແນວໃດ? ພຣະອົງຈະຍຶດຕິດກັບສິ່ງເກົ່າໄດ້ແນວໃດ? ພຣະນາມຂອງພຣະເຢຊູແມ່ນຖືກໃຊ້ ໂດຍເຫັນແກ່ພາລະກິດແຫ່ງການໄຖ່ບາບ, ສະນັ້ນ ພຣະອົງຍັງຈະຖືກເອີ້ນໂດຍພຣະນາມເດີມເມື່ອພຣະອົງກັບຄືນມາໃນຍຸກສຸດທ້າຍນີ້ບໍ? ພຣະອົງຍັງຈະປະຕິບັດພາລະກິດແຫ່ງການໄຖ່ບາບອີກບໍ? ເປັນຫຍັງພຣະເຢໂຮວາ ແລະ ພຣະເຢຊູທີ່ເປັນໜຶ່ງດຽວກັນ, ແຕ່ພຣະອົງທັງສອງພັດຖືກເອີ້ນຊື່ຕ່າງກັນໃນຍຸກທີ່ແຕກຕ່າງກັນ? ບໍ່ແມ່ນຍ້ອນຍຸກແຫ່ງພາລະກິດຂອງ

ພຣະອົງທັງສອງແຕກຕ່າງກັນບໍ? ພຣະນາມດຽວຈະສາມາດເປັນຕົວແທນທັງໝົດໃຫ້ກັບພຣະອົງໄດ້ແນວໃດ? ຖ້າເປັນແບບນັ້ນ, ພຣະເຈົ້າກໍຕ້ອງຖືກເອີ້ນຫຼາຍຊື່ທີ່ແຕກຕ່າງກັນຕາມແຕ່ລະຍຸກທີ່ແຕກຕ່າງ ແລະ ພຣະອົງຕ້ອງໃຊ້ພຣະນາມເພື່ອປ່ຽນແປງຍຸກ ແລະ ເປັນຕົວແທນໃຫ້ກັບຍຸກດັ່ງກ່າວ. ຍ້ອນບໍ່ມີພຣະນາມໃດໜຶ່ງສາມາດເປັນຕົວແທນໃຫ້ກັບພຣະເຈົ້າເອງຢ່າງສົມບູນໄດ້ ແລະ ພຣະນາມແຕ່ລະຢ່າງກໍພຽງແຕ່ສາມາດເປັນຕົວແທນໃຫ້ກັບລັກສະນະຊົ່ວຄາວຂອງອຸປະນິໄສຂອງພຣະເຈົ້າໃນຍຸກທີ່ຖືກກຳນົດໄວ້ເທົ່ານັ້ນ; ທຸກສິ່ງທີ່ຕ້ອງເຮັດກໍຄືການເປັນຕົວແທນໃຫ້ກັບພາລະກິດຂອງພຣະອົງ. ສະນັ້ນ, ພຣະເຈົ້າສາມາດເລືອກພຣະນາມໃດກໍຕາມທີ່ເໝາະສົມກັບອຸປະນິໄສຂອງພຣະອົງເພື່ອແທນໃຫ້ກັບຍຸກທັງໝົດ. ບໍ່ວ່າມັນຈະເປັນຍຸກຂອງພຣະເຢໂຮວາ ຫຼື ຍຸກຂອງພຣະເຢຊູ, ແຕ່ລະຍຸກກໍມີພຣະນາມໃດໜຶ່ງເປັນຕົວແທນຂອງຍຸກ. ໃນເວລາສຸດທ້າຍຂອງຍຸກແຫ່ງພຣະຄຸນ, ເຊິ່ງເປັນການເລີ່ມເປີດຍຸກສຸດທ້າຍຂຶ້ນ. ຕອນນັ້ນພຣະເຢຊູແມ່ນໄດ້ຜ່ານໄປແລ້ວ. ແລ້ວພຣະອົງຍັງຈະຖືກເອີ້ນວ່າພຣະເຢຊູໄດ້ແນວໃດ? ພຣະອົງຍັງຈະປາກົດຕົວໃນຮູບຮ່າງຂອງພຣະເຢຊູທ່າມກາງມະນຸດໄດ້ແນວໃດ? ເຈົ້າລືມໄປແລ້ວບໍວ່າ ພຣະເຢຊູເປັນພຽງປະຊາຊົນຂອງເມືອງນາຊາເຣັດ? ເຈົ້າລືມໄປແລ້ວບໍວ່າ ພຣະເຢຊູເປັນພຽງພຣະຜູ້ໄຖ່ຂອງມະນຸດຊາດເທົ່ານັ້ນ? ພຣະອົງຈະສາມາດຮັບພາລະກິດແຫ່ງການເອົາຊະນະ ແລະ ເຮັດໃຫ້ມະນຸດສົມບູນໃນຍຸກສຸດທ້າຍໄດ້ແນວໃດ? ພຣະເຢຊູຈາກໄປເທິງເມກສີຂາວແລ້ວ, ນີ້ແມ່ນຄວາມຈິງ, ດັ່ງນັ້ນ ພຣະອົງຈະກັບຄືນມາເທິງເມກສີຂາວທ່າມກາງມະນຸດ ແລະ ຍັງຖືກເອີ້ນວ່າພຣະເຢຊູໄດ້ແນວໃດ? ຖ້າພຣະອົງກັບມາເທິງກ້ອນເມກແທ້ໆ, ເຫດໃດມະນຸດຈຶ່ງບໍ່ຈື່ພຣະອົງເລີຍ? ຜູ້ຄົນທົ່ວໂລກຈະບໍ່ຈື່ພຣະອົງບໍ? ໃນກໍລະນີນັ້ນ, ພຣະເຢຊູຈະບໍ່ແມ່ນພຣະເຈົ້າພຽງອົງດຽວບໍ? ໃນກໍລະນີນັ້ນ, ລັກສະນະຂອງພຣະເຈົ້າກໍຈະເປັນຮູບຮ່າງຂອງຊາວຢິວ ແລະ ຍິ່ງໄປກວ່ານັ້ນ ພຣະອົງກໍຈະເປັນແບບເກົ່າຕະຫຼອດໄປ. ພຣະເຢຊູກ່າວວ່າ ພຣະອົງຈະກັບມາເໝືອນກັບທີ່ພຣະອົງຈາກໄປ, ແຕ່ເຈົ້າຮູ້ຈັກຄວາມໝາຍທີ່ແທ້ຈິງຂອງພຣະທຳຂອງພຣະອົງບໍ? ເປັນໄປໄດ້ບໍ ທີ່ພຣະອົງໄດ້ ບອກກຸ່ມຂອງພວກເຈົ້າ? ສິ່ງດຽວທີ່ເຈົ້າຮູ້ກໍ່ຄື ພຣະອົງຈະກັບມາເໝືອນກັບທີ່ພຣະອົງຈາກໄປ ໂດຍຂີ່ເທິງເມກສີຂາວ, ແຕ່ເຈົ້າບໍ່ຮູ້ວິທີທີ່ພຣະເຈົ້າປະຕິບັດພາລະກິດຂອງພຣະອົງຢ່າງແທ້ຈິງ. ຖ້າເຈົ້າສາມາດເຂົ້າໃຈທຸກສິ່ງຢ່າງແທ້ຈິງ, ແລ້ວເຈົ້າຈະອະທິບາຍພຣະທຳທີ່ພຣະເຢຊູກ່າວໄວ້ນັ້ນແນວໃດ? ພຣະອົງກ່າວວ່າ: ເມື່ອບຸດມະນຸດກັບມາໃນຍຸກສຸດທ້າຍ, ພຣະອົງເອງກໍຈະບໍ່ຮູ້, ທູດສະຫວັນກໍຈະບໍ່ຮູ້, ຜູ້ສົ່ງຂ່າວໃນສະຫວັນກໍຈະບໍ່ຮູ້ ແລະ ມະນຸດທັງປວງກໍຈະບໍ່ຮູ້. ມີພຽງແຕ່ພຣະບິດາເທົ່ານັ້ນທີ່ຈະຮູ້ ນັ້ນກໍຄື ມີພຽງແຕ່ພຣະວິນຍານເທົ່ານັ້ນທີ່ຈະຮູ້. ແມ່ນແຕ່ບຸດມະນຸດເອງກໍຍັງບໍ່ຮູ້, ແຕ່ເຈົ້າສາມາດເຫັນ ແລະ ຮູ້ໄດ້ແນວໃດ? ຖ້າເຈົ້າສາມາດຮູ້ ແລະ ເຫັນດ້ວຍຕາຂອງເຈົ້າເອງ, ພຣະທຳເຫຼົ່ານີ້ທີ່ຖືກກ່າວໄວ້ກໍຈະບໍ່ມີປະໂຫຍດຫຍັງບໍ? ແລ້ວພຣະເຢຊູໄດ້ກ່າວໄວ້ແນວໃດໃນເວລານັ້ນ? "ແຕ່ສຳລັບເລື່ອງຂອງວັນ ແລະ ເວລານັ້ນ ບໍ່ມີມະນຸດຄົນໃດຮູ້, ແມ່ນແຕ່ທູດສະຫວັນທີ່ຢູ່ໃນສະຫວັນ ຫຼື ພຣະບຸດກໍບໍ່ຮູ້ ມີແຕ່ພຣະບິດາຂອງເຮົາຜູ້ດຽວ. ແຕ່ໃນຍຸກຂອງໂນອາເປັນແບບໃດນັ້ນ ການມາຂອງບຸດມະນຸດກໍຈະເປັນແບບນັ້ນເຊັ່ນກັນ... ສະນັ້ນ ພວກເຈົ້າຈົ່ງກຽມພ້ອມສະເໝີ ຍ້ອນບຸດມະນຸດຈະມາໃນເວລາທີ່ທ່ານຄິດ

ບໍ່ເຖິງ". ເມື່ອເວລານັ້ນມາເຖິງ, ບຸດມະນຸດເອງກໍຈະບໍ່ຮູ້ເຊັ່ນກັນ. ບຸດມະນຸດໝາຍເຖິງເນື້ອໜັງຂອງພຣະເຈົ້າທີ່ຊີງບັງເກີດເປັນມະນຸດ, ເປັນບຸກຄົນທີ່ທຳມະດາ ແລະ ສາມັນ. ແມ່ນແຕ່ບຸດມະນຸດຍັງບໍ່ຮູ້, ແລ້ວເຈົ້າຈະຮູ້ໄດ້ແນວໃດ? ພຣະເຢຊູກ່າວວ່າ ພຣະອົງຈະສະເດັດມາເໝືອນກັບທີ່ພຣະອົງຈາກໄປ. ເມື່ອພຣະອົງກັບມາ, ແມ່ນແຕ່ພຣະອົງເອງກໍຍັງບໍ່ຮູ້, ແລ້ວພຣະອົງຈະແຈ້ງໃຫ້ເຈົ້າຮູ້ລ່ວງໜ້າໄດ້ແນວໃດ? ເຈົ້າສາມາດເຫັນການມາເຖິງຂອງພຣະອົງບໍ? ແລ້ວນັ້ນບໍ່ແມ່ນເລື່ອງຕະຫຼົກບໍ? ແຕ່ລະຄັ້ງທີ່ພຣະເຈົ້າສະເດັດມາສູ່ແຜ່ນດິນໂລກ, ພຣະອົງປ່ຽນພຣະນາມຂອງພຣະອົງ, ເພດຂອງພຣະອົງ, ລັກສະນະຂອງພຣະອົງ ແລະ ພາລະກິດຂອງພຣະອົງ; ພຣະອົງບໍ່ເຮັດຊໍ້າພາລະກິດຂອງພຣະອົງ. ພຣະອົງເປັນພຣະເຈົ້າທີ່ໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ. ເມື່ອພຣະອົງມາກ່ອນໜ້ານີ້, ພຣະອົງຖືກເອີ້ນວ່າ ພຣະເຢຊູ; ແລ້ວພຣະອົງຈະຍັງສາມາດຖືກເອີ້ນວ່າ ພຣະເຢຊູ ໃນການສະເດັດມາຂອງພຣະອົງໃນຄັ້ງນີ້ໄດ້ບໍ? ເມື່ອພຣະອົງມາກ່ອນໜ້ານີ້, ພຣະອົງເປັນຜູ້ຊາຍ; ແລ້ວພຣະອົງຈະສາມາດເປັນຜູ້ຊາຍໃນເທື່ອນີ້ໄດ້ອີກບໍ? ພາລະກິດຂອງພຣະອົງໃນເວລາທີ່ພຣະອົງສະເດັດມາໃນລະຫວ່າງຍຸກແຫ່ງພຣະຄຸນນັ້ນ ແມ່ນການຖືກຄຶງເທິງໄມ້ກາງແຂນ; ເມື່ອພຣະອົງສະເດັດມາອີກຄັ້ງ, ພຣະອົງຈະຍັງໄຖ່ມະນຸດຊາດອອກຈາກຄວາມຜິດບາບບໍ? ພຣະອົງຈະຖືກຄຶງເທິງໄມ້ກາງແຂນອີກຄັ້ງບໍ? ແລ້ວນັ້ນຈະບໍ່ເປັນການເຮັດຊໍ້າພາລະກິດຂອງພຣະອົງບໍ? ເຈົ້າບໍ່ຮູ້ບໍວ່າ ພຣະເຈົ້າໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ? ມີຄົນເວົ້າວ່າ ພຣະເຈົ້າບໍ່ສາມາດປ່ຽນແປງໄດ້. ສິ່ງນັ້ນແມ່ນຖືກຕ້ອງ, ແຕ່ມັນໝາຍເຖິງການບໍ່ປ່ຽນແປງຂອງອຸປະນິໄສຂອງພຣະເຈົ້າ ແລະ ແກ່ນແທ້ຂອງພຣະອົງ. ການປ່ຽນແປງຊື່ ແລະ ພາລະກິດຂອງພຣະອົງບໍ່ໄດ້ໝາຍຄວາມວ່າ ແກ່ນແທ້ຂອງພຣະອົງໄດ້ປ່ຽນໄປ; ເວົ້າອີກຢ່າງໜຶ່ງກໍຄື ພຣະເຈົ້າກໍຍັງເປັນພຣະເຈົ້າຢູ່ສະເໝີ ແລະ ສິ່ງນີ້ຈະບໍ່ປ່ຽນແປງຈັກເທື່ອ. ຖ້າເຈົ້າເວົ້າວ່າ ພາລະກິດຂອງພຣະເຈົ້າບໍ່ປ່ຽນແປງ, ແລ້ວພຣະອົງຈະສາມາດສຳເລັດແຜນການຄຸ້ມຄອງຫົກພັນປີຂອງພຣະອົງໄດ້ບໍ? ເຈົ້າຮູ້ແຕ່ວ່າ ພຣະເຈົ້າບໍ່ປ່ຽນແປງຕະຫຼອດໄປ, ແຕ່ເຈົ້າຮູ້ບໍວ່າ ພຣະເຈົ້າໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ? ຖ້າພາລະກິດຂອງພຣະເຈົ້າບໍ່ປ່ຽນແປງ, ແລ້ວພຣະອົງຈະນຳພາມະນຸດຊາດທັງໝົດມາເຖິງປັດຈຸບັນໄດ້ແນວໃດ? ຖ້າພຣະເຈົ້າບໍ່ປ່ຽນແປງ, ແລ້ວເປັນຫຍັງພຣະອົງຈຶ່ງສຳເລັດພາລະກິດຂອງສອງຍຸກໄດ້? ພາລະກິດຂອງພຣະອົງບໍ່ເຄີຍຢຸດກ້າວໄປຂ້າງໜ້າ, ເຊິ່ງເວົ້າໄດ້ວ່າ ອຸປະນິໄສຂອງພຣະອົງຖືກເປີດເຜີຍໃຫ້ກັບມະນຸດເທື່ອລະໜ້ອຍ ແລະ ສິ່ງທີ່ຖືກເປີດເຜີຍແມ່ນອຸປະນິໄສໂດຍທຳມະຊາດຂອງພຣະອົງ. ໃນຕອນເລີ່ມຕົ້ນ, ອຸປະນິໄສຂອງພຣະອົງຖືກເຊື່ອງຊ້ອນຈາກມະນຸດ, ພຣະອົງບໍ່ເຄີຍເປີດເຜີຍອຸປະນິໄສຂອງພຣະອົງໃຫ້ມະນຸດເຫັນຈັກເທື່ອ ແລະ ມະນຸດບໍ່ມີຄວາມຮູ້ກ່ຽວກັບພຣະອົງເລີຍ. ດ້ວຍເຫດນີ້, ພຣະອົງຈຶ່ງໃຊ້ພາລະກິດຂອງພຣະອົງເພື່ອເປີດເຜີຍອຸປະນິໄສຂອງພຣະອົງໃຫ້ກັບມະນຸດເທື່ອລະໜ້ອຍ, ແຕ່ການປະຕິບັດພາລະກິດໃນລັກສະນະນີ້ບໍ່ໄດ້ໝາຍຄວາມວ່າ ອຸປະນິໄສຂອງພຣະເຈົ້າຈະປ່ຽນໄປໃນແຕ່ລະຍຸກ. ມັນບໍ່ແມ່ນກໍລະນີທີ່ວ່າ ອຸປະນິໄສຂອງພຣະເຈົ້າປ່ຽນແປງຢູ່ຕະຫຼອດ ຍ້ອນວ່າຄວາມປະສົງຂອງພຣະອົງປ່ຽນແປງຢູ່ສະເໝີ. ກົງກັນຂ້າມ, ມັນເປັນຍ້ອນວ່າ ຍຸກແຫ່ງພາລະກິດຂອງພຣະອົງແຕກຕ່າງກັນ, ພຣະເຈົ້ານຳອຸປະນິໄສໂດຍທຳມະຊາດຂອງພຣະອົງທັງໝົດ ແລະ ເປີດເຜີຍສິ່ງ

ນັ້ນໃຫ້ມະນຸດເຫັນເທື່ອລະຂັ້ນຕອນ, ເພື່ອມະນຸດຈະໄດ້ຮູ້ຈັກພຣະອົງ. ແຕ່ສິ່ງນີ້ກໍບໍ່ໄດ້ໝາຍຄວາມວ່າ ພຣະເຈົ້າບໍ່ໄດ້ມີອຸປະນິໄສໂດຍສະເພາະ ມາແຕ່ດັ້ງເດີມ ຫຼືວ່າ ອຸປະນິໄສຂອງພຣະອົງໄດ້ປ່ຽນໄປຕາມຍຸກສະໄໝ, ການເຂົ້າໃຈແບບນັ້ນແມ່ນເປັນການເຂົ້າໃຈຜິດ. ພຣະເຈົ້າ ເປີດເຜີຍອຸປະນິໄສໂດຍທຳມະຊາດ ແລະ ສະເພາະຂອງພຣະອົງໃຫ້ກັບມະນຸດ ນັ້ນກໍຄື ສິ່ງທີ່ພຣະອົງ ເປັນຕາມຍຸກຕ່າງໆທີ່ຜ່ານໄປ; ພາລະກິດຂອງແຕ່ລະຍຸກ ບໍ່ສາມາດສຳແດງເຖິງອຸປະນິໄສທັງໝົດຂອງພຣະເຈົ້າໄດ້. ດ້ວຍເຫດນັ້ນ ພຣະທຳທີ່ວ່າ "ພຣະເຈົ້າໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ" ກໍໝາຍເຖິງພາລະກິດຂອງພຣະອົງ ແລະ ພຣະທຳທີ່ວ່າ "ພຣະເຈົ້າບໍ່ປ່ຽນແປງ" ໝາຍເຖິງສິ່ງທີ່ພຣະເຈົ້າມີ ແລະ ເປັນໂດຍທຳມະຊາດ. ຢ່າງໃດກໍຕາມ ເຈົ້າບໍ່ສາມາດເຮັດໃຫ້ພາລະກິດຫົກພັນປີຂຶ້ນຢູ່ກັບຈຸດໜຶ່ງດຽວ ຫຼື ຈຳກັດມັນດ້ວຍຄຳເວົ້າທີ່ຕາຍແລ້ວ. ສິ່ງດັ່ງກ່າວເປັນຄວາມໂງ່ຈ້າຂອງມະນຸດ. ພຣະເຈົ້າບໍ່ໄດ້ງ່າຍຕາມທີ່ມະນຸດຈິນຕະນາການ ແລະ ພາລະກິດຂອງພຣະອົງກໍບໍ່ໄດ້ຄ້າງຢູ່ໃນຍຸກໃດໜຶ່ງ. ຕົວຢ່າງ ພຣະເຢໂຮວາບໍ່ສາມາດເປັນຕົວແທນໃຫ້ກັບພຣະນາມຂອງພຣະເຈົ້າຕະຫຼອດໄປ; ພຣະເຈົ້າສາມາດປະຕິບັດພາລະກິດຂອງພຣະອົງພາຍໃຕ້ພຣະນາມຂອງພຣະເຢຊູເຊັ່ນດຽວກັນ. ສິ່ງນີ້ສະແດງໃຫ້ເຫັນວ່າພາລະກິດຂອງພຣະເຈົ້າກ້າວໜ້າໄປຂ້າງໜ້າຢູ່ຫສະເໝີ.

ພຣະເຈົ້າກໍເປັນພຣະເຈົ້າຢູ່ສະເໝີ ແລະ ພຣະອົງຈະບໍ່ກາຍມາເປັນຊາຕານຈັກເທື່ອ; ຊາຕານກໍເປັນຊາຕານຢູ່ສະເໝີ ແລະ ມັນຈະບໍ່ກາຍມາເປັນພຣະເຈົ້າຈັກເທື່ອ. ສະຕິປັນຍາຂອງພຣະເຈົ້າ, ຄວາມອັດສະຈັນຂອງພຣະເຈົ້າ, ຄວາມຊອບທຳຂອງພຣະເຈົ້າ ແລະ ຄວາມສະຫງ່າງາມຂອງພຣະເຈົ້າຈະບໍ່ປ່ຽນແປງຈັກເທື່ອ. ທາດແທ້ຂອງພຣະອົງ, ສິ່ງທີ່ພຣະອົງມີ ແລະ ເປັນຈະບໍ່ປ່ຽນແປງຈັກເທື່ອ. ແຕ່ວ່າ ສຳລັບພາລະກິດຂອງພຣະອົງແລ້ວ ແມ່ນພັດທະນາໄປຂ້າງໜ້າຢູ່ສະເໝີ ແລະ ລົງເລິກເຂົ້າໄປເລື້ອຍໆ ຍ້ອນວ່າ ພຣະອົງໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ. ໃນແຕ່ລະຍຸກພຣະເຈົ້ານຳໃຊ້ພຣະນາມໃໝ່, ໃນແຕ່ລະຍຸກພຣະອົງປະຕິບັດພາລະກິດໃໝ່ ແລະ ໃນແຕ່ລະຍຸກພຣະອົງຍອມໃຫ້ສິ່ງເນລະມິດສ້າງຂອງພຣະອົງເຫັນເຖິງຄວາມປະສົງໃໝ່ ແລະ ອຸປະນິໄສໃໝ່ຂອງພຣະອົງ. ໃນຍຸກໃໝ່ນັ້ນ ຖ້າຜູ້ຄົນບໍ່ສາມາດເຫັນເຖິງການສຳແດງອອກແຫ່ງອຸປະນິໄສໃໝ່ຂອງພຣະເຈົ້າ, ພວກເຂົາຈະບໍ່ຄຶງພຣະອົງເທິງໄມ້ກາງແຂນຕະຫຼອດໄປບໍ? ແລ້ວການເຮັດແບບນັ້ນ, ພວກເຂົາຈະບໍ່ຄັດຄ້ານພຣະເຈົ້າບໍ? ຖ້າພຣະເຈົ້າ ສະເດັດມາເປັນມະນຸດໃນເພດຊາຍເທົ່ານັ້ນ, ຜູ້ຄົນກໍຈະຈຳກັດພຣະອົງເປັນຜູ້ຊາຍ, ເປັນພຣະເຈົ້າຂອງຜູ້ຊາຍ ແລະ ຈະບໍ່ເຊື່ອວ່າພຣະອົງເປັນພຣະເຈົ້າຂອງຜູ້ຍິງ. ແລ້ວຜູ້ຊາຍກໍຈະຖືວ່າ ພຣະເຈົ້າມີເພດດຽວກັນກັບຜູ້ຊາຍ, ພຣະເຈົ້າເປັນຫົວໜ້າຂອງຜູ້ຊາຍ, ແລ້ວຜູ້ຍິງເດ? ສິ່ງນີ້ບໍ່ຍຸຕິທຳເລີຍ; ມັນບໍ່ແມ່ນເປັນການປະຕິບັດແບບລຳອຽງບໍ? ຖ້າເປັນແບບນັ້ນ, ແລ້ວທຸກຄົນທີ່ພຣະເຈົ້າຊ່ວຍໃຫ້ລອດພົ້ນກໍຈະເປັນຜູ້ຊາຍຄືກັນກັບພຣະອົງ ແລະ ບໍ່ມີຜູ້ຍິງແມ່ນແຕ່ຄົນດຽວທີ່ຈະຖືກຊ່ວຍໃຫ້ລອດພົ້ນ. ເມື່ອພຣະເຈົ້າ ສ້າງມະນຸດຊາດ, ພຣະອົງສ້າງອາດາມ ແລະ ພຣະອົງສ້າງເອວາ. ພຣະອົງບໍ່ພຽງແຕ່ສ້າງອາດາມ, ແຕ່ສ້າງທັງຜູ້ຊາຍ ແລະ ຜູ້ຍິງ ໃນພາບຫຼັກຂອງພຣະອົງ. ພຣະເຈົ້າບໍ່ໄດ້ເປັນພຽງແຕ່ພຣະເຈົ້າຂອງຜູ້ຊາຍ, ພຣະອົງຍັງເປັນພຣະເຈົ້າຂອງຜູ້ຍິງ. ພຣະເຈົ້າໄດ້ເຂົ້າສູ່ຂັ້ນຕອນໃໝ່ຂອງພາລະກິດໃນຍຸກ

ສຸດທ້າຍ. ພຣະອົງຈະເປີດເຜີຍອຸປະນິໄສຂອງພຣະອົງຫຼາຍຍິ່ງຂຶ້ນ ແລະ ມັນຈະບໍ່ແມ່ນຄວາມເມດຕາ ແລະ ຄວາມຮັກແບບໃນຍຸກຂອງພຣະເຢຊູ. ໃນປັດຈຸບັນ ຍ້ອນພຣະອົງມີພາລະກິດໃໝ່ ແລະ ພາລະກິດໃໝ່ນີ້ຈະມາພ້ອມກັບອຸປະນິໄສໃໝ່. ສະນັ້ນ, ຖ້າພາລະກິດນີ້ຖືກກະທຳໂດຍພຣະວິນຍານ ນັ້ນກໍຄື ຖ້າພຣະເຈົ້າບໍ່ໄດ້ມາເປັນມະນຸດ ແລະ ກົງກັນຂ້າມ ພຣະວິນຍານກ່າວໂດຍກົງຜ່ານທາງສຽງຟ້າຮ້ອງ ຈົນມະນຸດບໍ່ມີຫົນທາງທີ່ຈະພົບພໍ້ກັບພຣະອົງ, ມະນຸດຈະສາມາດຮູ້ຈັກເຖິງອຸປະນິໄສຂອງພຣະອົງໄດ້ບໍ? ຖ້າເປັນພຽງພຣະວິນຍານເທົ່ານັ້ນທີ່ປະຕິບັດພາລະກິດ, ແລ້ວມະນຸດກໍຈະບໍ່ມີຫົນທາງທີ່ຈະຮູ້ຈັກອຸປະນິໄສຂອງພຣະເຈົ້າໄດ້. ຜູ້ຄົນພຽງແຕ່ສາມາດເຫັນອຸປະນິໄສຂອງພຣະເຈົ້າດ້ວຍຕາຂອງພວກເຂົາເອງເມື່ອພຣະອົງກາຍມາເປັນມະນຸດ, ເມື່ອພຣະທຳປາກົດໃນເນື້ອໜັງ ແລະ ພຣະອົງສຳແດງອຸປະນິໄສທັງໝົດຂອງພຣະອົງຜ່ານທາງເນື້ອໜັງ. ພຣະເຈົ້າດຳລົງຊີວິດທ່າມກາງມະນຸດຢ່າງແທ້ຈິງ ແລະ ເປັນຈິງ. ພຣະອົງສາມາດຈັບຕ້ອງໄດ້; ມະນຸດສາມາດສຳຜັດກັບອຸປະນິໄສຂອງພຣະອົງໄດ້ຢ່າງແທ້ຈິງ, ສຳຜັດກັບສິ່ງທີ່ພຣະອົງມີ ແລະ ເປັນ; ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈຶ່ງຈະຮຽນຮູ້ຈັກພຣະອົງຢ່າງແທ້ຈິງ. ໃນເວລານັ້ນ, ພຣະເຈົ້າໄດ້ ສຳເລັດພາລະກິດ ທີ່ "ພຣະເຈົ້າເປັນພຣະເຈົ້າຂອງຜູ້ຊາຍ ແລະ ເປັນພຣະເຈົ້າຂອງຜູ້ຍິງ" ແລະ ສຳເລັດພາລະກິດທັງໝົດຂອງພຣະອົງທີ່ຢູ່ໃນເນື້ອໜັງ. ພຣະອົງບໍ່ ປະຕິບັດພາລະກິດດັ່ງກ່າວຄືນໃໝ່ໃນຍຸກໃດກໍຕາມ. ຍ້ອນຍຸກສຸດທ້າຍໄດ້ມາເຖິງແລ້ວ, ພຣະອົງຈະປະຕິບັດພາລະກິດທີ່ພຣະອົງຈະກະທຳໃນຍຸກສຸດທ້າຍ ແລະ ເປີດເຜີຍອຸປະນິໄສທັງໝົດຂອງພຣະອົງໃນຍຸກສຸດທ້າຍ. ເວົ້າເຖິງຍຸກສຸດທ້າຍ, ນັ້ນໝາຍເຖິງຍຸກອື່ນ ເຊິ່ງເປັນຍຸກທີ່ພຣະເຢຊູກ່າວວ່າ ພວກເຈົ້າຈະປະສົບກັບໄພພິບັດຢ່າງແນ່ນອນ ແລະ ປະສົບກັບແຜ່ນດິນໄຫວ, ຄວາມອຶດຫິວ ແລະ ໂລກລະບາດຕ່າງໆ ເຊິ່ງຄຳກ່າວນັ້ນແມ່ນສະແດງເຖິງຍຸກໃໝ່ ແລະ ບໍ່ແມ່ນຍຸກແຫ່ງພຣະຄຸນທີ່ເປັນຍຸກເກົ່າອີກຕໍ່ໄປ. ລອງສົມມຸດວ່າ ຕາມທີ່ຜູ້ຄົນເວົ້າ ພຣະເຈົ້າບໍ່ປ່ຽນແປງຕະຫຼອດໄປ, ອຸປະນິໄສຂອງພຣະອົງແມ່ນຄວາມເມດຕາ ແລະ ຄວາມຮັກຢູ່ສະເໝີ, ພຣະອົງ ຮັກມະນຸດເໝືອນກັບພຣະອົງເອງ ແລະ ພຣະອົງ ມອບຄວາມລອດພົ້ນໃຫ້ກັບມະນຸດທຸກຄົນ ແລະ ບໍ່ເຄີຍກຽດຊັງມະນຸດເລີຍ, ແລ້ວພາລະກິດຂອງພຣະອົງຈະມາເຖິງຈຸດສິ້ນສຸດໄດ້ແນວໃດ? ເມື່ອພຣະເຢຊູ ສະເດັດມາ ແລະ ຖືກຄຶງເທິງໄມ້ກາງແຂນ, ສະຫຼະຕົວພຣະອົງເອງໃຫ້ກັບຄົນບາບທັງປວງ ແລະ ຖວາຍພຣະອົງເອງເທິງແທ່ນບູຊາ, ພຣະອົງແມ່ນໄດ້ສຳເລັດພາລະກິດແຫ່ງການໄຖ່ບາບມະນຸດແລ້ວ ແລະ ໄດ້ນຳຍຸກແຫ່ງພຣະຄຸນມາເຖິງຈຸດສິ້ນສຸດ. ສະນັ້ນ ແມ່ນຫຍັງຈະເປັນເປົ້າໝາຍຂອງການເຮັດພາລະກິດຂອງຍຸກນັ້ນຊໍ້າໃນຍຸກສຸດທ້າຍ? ການເຮັດສິ່ງດຽວກັນຈະບໍ່ແມ່ນການປະຕິເສດພາລະກິດຂອງພຣະເຢຊູບໍ? ຖ້າພຣະເຈົ້າບໍ່ໄດ້ປະຕິບັດພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນ ກ່ອນທີ່ພຣະອົງສະເດັດມາໃນຂັ້ນຕອນນີ້ ແລ້ວຍັງຄົງເຕັມໄປດ້ວຍຄວາມຮັກ ແລະ ຄວາມເມດຕາ, ແລ້ວພຣະອົງຈະສາມາດນຳຍຸກນັ້ນມາເຖິງຈຸດສິ້ນສຸດໄດ້ແນວໃດ? ໃນພາລະກິດສຸດທ້າຍຂອງການສິ້ນສຸດຍຸກຂອງພຣະອົງ, ອຸປະນິໄສຂອງພຣະອົງແມ່ນການຂ້ຽນຕີ ແລະ ການພິພາກສາ ເຊິ່ງພຣະອົງເປີດເຜີຍທຸກສິ່ງທີ່ບໍ່ຊອບທຳ ເພື່ອພິພາກສາທຸກຄົນຢ່າງເປີດເຜີຍ ແລະ ເພື່ອເຮັດໃຫ້ຄົນທີ່ຮັກພຣະອົງດ້ວຍຈິງໃຈສົມບູນແບບ. ພຽງ

ການກະທຳແບບນີ້ເທົ່ານັ້ນທີ່ສາມາດນຳການສິ້ນສຸດມາສູ່ຍຸກໄດ້. ຍຸກສຸດທ້າຍໄດ້ມາເຖິງແລ້ວ. ສັບພະທຸກສິ່ງໃນການຊົງສ້າງຈະຖືກແບ່ງແຍກອອກຕາມປະເພດຂອງພວກເຂົາ ແລະ ແບ່ງແຕ່ລະປະເພດອອກອີງຕາມທຳມະຊາດຂອງພວກເຂົາ. ນີ້ແມ່ນຊ່ວງເວລາທີ່ພຣະເຈົ້າເປີດເຜີຍຜົນສະຫຼຸບທີ່ມະນຸດຈະໄດ້ຮັບ ແລະ ຈຸດໝາຍປາຍທາງຂອງພວກເຂົາ. ຖ້າຜູ້ຄົນບໍ່ໄດ້ຜ່ານການຂ້ຽນຕີ ແລະ ການພິພາກສາ ແລ້ວກໍຈະບໍ່ມີທາງເປີດເຜີຍຄວາມບໍ່ເຊື່ອຟັງ ແລະ ຄວາມບໍ່ຊອບທຳຂອງພວກເຂົາໄດ້. ພຽງແຕ່ຜ່ານການຂ້ຽນຕີ ແລະ ການພິພາກສາເທົ່ານັ້ນຈຶ່ງຈະສາມາດເປີດເຜີຍຜົນຕາມມາຂອງການສ້າງສັບພະສິ່ງ. ມະນຸດພຽງແຕ່ສະແດງທາດແທ້ຂອງເຂົາເມື່ອເຂົາຖືກຂ້ຽນຕີ ແລະ ຖືກພິພາກສາ. ຄົນຊົ່ວຮ້າຍຈະຖືກຈັດໄວ້ຢູ່ນຳຄົນຊົ່ວຮ້າຍ, ຄົນດີໄວ້ກັບຄົນດີ ແລະ ມະນຸດທຸກຄົນຈະຖືກແບ່ງແຍກຕາມປະເພດຂອງພວກເຂົາ. ຜົນຕາມມາຂອງການຊົງສ້າງຈະຖືກເປີດເຜີຍຜ່ານການຂ້ຽນຕີ ແລະ ການພິພາກສາ ເພື່ອຄົນຊົ່ວຮ້າຍຈະຖືກລົງໂທດ ແລະ ຄົນດີຈະໄດ້ຮັບລາງວັນ ແລະ ທຸກຄົນຈະໄດ້ຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ. ພາລະກິດທັງໝົດນີ້ຕ້ອງຖືກເຮັດໃຫ້ສຳເລັດຜ່ານການຂ້ຽນຕີ ແລະ ພິພາກສາຢ່າງຊອບທຳ. ເນື່ອງຈາກຄວາມເສື່ອມຊາມຂອງມະນຸດໄດ້ເຖິງຂັ້ນຮ້າຍແຮງທີ່ສຸດ ແລະ ຄວາມບໍ່ເຊື່ອຟັງຂອງພວກເຂົານັ້ນຮ້າຍແຮງຢ່າງລົ້ນເຫຼືອ, ມີພຽງແຕ່ອຸປະນິໄສທີ່ຊອບທຳຂອງພຣະເຈົ້າເທົ່ານັ້ນ ເຊິ່ງເປັນສິ່ງທີ່ປະກອບດ້ວຍການຂ້ຽນຕີ ແລະ ການພິພາກສາເປັນສ່ວນໃຫຍ່ ທີ່ຖືກເປີດເຜີຍໃນຍຸກສຸດທ້າຍຈຶ່ງສາມາດປ່ຽນແປງ ແລະ ເຮັດໃຫ້ມະນຸດສົມບູນແບບຢ່າງແທ້ຈິງໄດ້. ມີພຽງອຸປະນິໄສນີ້ເທົ່ານັ້ນທີ່ສາມາດເປີດເຜີຍຄົນຊົ່ວຮ້າຍ ແລະ ລົງໂທດຄົນທີ່ບໍ່ຊອບທຳທຸກຄົນຢ່າງຮຸນແຮງໄດ້. ສະນັ້ນ, ອຸປະນິໄສດັ່ງກ່າວແມ່ນເຕັມໄປດ້ວຍຄວາມໝາຍຂອງຍຸກດັ່ງກ່າວ ແລະ ການເປີດເຜີຍ ແລະ ການສະແດງເຖິງອຸປະນິໄສຂອງພຣະອົງກໍຖືກເຮັດໃຫ້ແຈ່ມແຈ້ງເພື່ອພາລະກິດຂອງແຕ່ລະຍຸກ. ບໍ່ແມ່ນວ່າ ພຣະເຈົ້າເປີດເຜີຍອຸປະນິໄສຂອງພຣະອົງຕາມອຳເພີໃຈ ແລະ ປາສະຈາກຄວາມໝາຍ. ລອງສົມມຸດວ່າ ໃນການເປີດເຜີຍຜົນໄດ້ຮັບຂອງມະນຸດໃນລະຫວ່າງຍຸກສຸດທ້າຍ, ພຣະເຈົ້າຍັງຄົງປະທານຄວາມເມດຕາ ແລະ ຄວາມຮັກຢ່າງບໍ່ໝົດສິ້ນ ແລະ ສືບຕໍ່ຮັກເຂົາ, ບໍ່ເຮັດໃຫ້ມະນຸດປະສົບກັບການພິພາກສາທີ່ຊອບທຳ ແຕ່ກົງກັນຂ້າມ ພຣະອົງສະແດງໃຫ້ມະນຸດເຫັນເຖິງຄວາມອົດກັ້ນ, ອົດທົນ ແລະ ການອະໄພໂທດ ແລະ ການຍົກໂທດໃຫ້ກັບມະນຸດ ບໍ່ວ່າຄວາມຜິດບາບຂອງເຂົາຈະຮ້າຍແຮງສໍ່າໃດກໍຕາມ, ບໍ່ມີແມ່ນແຕ່ເສດສ່ວນຂອງການພິພາກສາທີ່ຊອບທຳ: ແລ້ວເມື່ອໃດການຄຸ້ມຄອງທັງໝົດຂອງພຣະເຈົ້າຈຶ່ງຈະນຳມາສູ່ການສິ້ນສຸດ? ເມື່ອໃດອຸປະນິໄສແບບນີ້ຈຶ່ງຈະສາມາດນຳຜູ້ຄົນໄປສູ່ຈຸດໝາຍປາຍທາງທີ່ເໝາະສົມຂອງມະນຸດຊາດ? ລອງຍົກຕົວຢ່າງ ຜູ້ພິພາກສາທີ່ເຕັມໄປດ້ວຍຄວາມຮັກຢູ່ສະເໝີ, ຜູ້ພິພາກສາທີ່ມີໃບໜ້າເມດຕາ ແລະ ຫົວໃຈອ່ອນໂຍນ. ຜູ້ພິພາກສາທີ່ຮັກຜູ້ຄົນ ໂດຍບໍ່ສົນໃຈວ່າ ພວກເຂົາໄດ້ກໍ່ອາຊະຍາກຳຫຍັງກໍຕາມ ແລະ ຜູ້ພິພາກສາທີ່ເຕັມໄປດ້ວຍຄວາມຮັກ ແລະ ປ້ອງກັນຄົນກະທຳຜິດໂດຍບໍ່ສົນວ່າພວກເຂົາເປັນໃຜ. ໃນກໍລະນີນີ້, ເມື່ອໃດຜູ້ພິພາກສາດັ່ງກ່າວຈະສາມາດໃຫ້ຄຳຕັດສິນຢ່າງຍຸຕິທຳໄດ້. ໃນລະຫວ່າງຍຸກສຸດທ້າຍ ມີພຽງການພິພາກສາທີ່ຊອບທຳເທົ່ານັ້ນສາມາດແບ່ງແຍກມະນຸດຕາມປະເພດຂອງພວກເຂົາ ແລະ ນຳເອົາມະນຸດ

ເຂົ້າສູ່ໂລກໃໝ່. ດ້ວຍວິທີນີ້ ຍຸກທັງໝົດຈະຖືກນຳມາສູ່ການສິ້ນສຸດ ຜ່ານອຸປະນິໄສທີ່ຊອບທຳແຫ່ງການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າ.

ພາລະກິດຂອງພຣະເຈົ້າຕະຫຼອດການຄຸ້ມຄອງທັງໝົດຂອງພຣະອົງແມ່ນຊັດເຈນຢ່າງສົມບູນ ນັ້ນກໍຄື: ຍຸກແຫ່ງພຣະຄຸນແມ່ນຍຸກແຫ່ງພຣະຄຸນ ແລະ ຍຸກສຸດທ້າຍກໍແມ່ນຍຸກສຸດທ້າຍ. ມີຄວາມແຕກຕ່າງຢ່າງຊັດເຈນລະຫວ່າງແຕ່ລະຍຸກ, ຍ້ອນໃນແຕ່ລະຍຸກນັ້ນ ພຣະເຈົ້າປະຕິບັດພາລະກິດເປັນຕົວແທນຂອງຍຸກນັ້ນໆ. ເພື່ອໃຫ້ພາລະກິດແຫ່ງຍຸກສຸດທ້າຍນັ້ນສຳເລັດລົງ, ຈຳເປັນຕ້ອງມີການເຜົາໄໝ້, ການພິພາກພາກ, ການຂ້ຽນຕີ, ຄວາມໂກດຮ້າຍ ແລະ ການທຳລາຍລ້າງເພື່ອນຳຍຸກໄປສູ່ຈຸດສິ້ນສຸດ, ຍຸກສຸດທ້າຍໝາຍເຖິງຊ່ວງເວລາສຸດທ້າຍ. ໃນລະຫວ່າງຍຸກສຸດທ້າຍ, ພຣະເຈົ້າຈະບໍ່ນຳຍຸກນັ້ນໄປສູ່ຈຸດສິ້ນສຸດບໍ? ເພື່ອສິ້ນສຸດຍຸກ, ພຣະເຈົ້າຕ້ອງນຳການຂ້ຽນຕີ ແລະ ການພິພາກສາມາພ້ອມກັບພຣະອົງ. ດ້ວຍວິທີນີ້ເທົ່ານັ້ນ ພຣະອົງຈຶ່ງຈະສາມາດນຳຍຸກດັ່ງກ່າວໄປສູ່ຈຸດສິ້ນສຸດໄດ້. ເປົ້າໝາຍຂອງພຣະເຢຊູແມ່ນເພື່ອໃຫ້ມະນຸດສືບຕໍ່ເອົາຕົວລອດ, ດຳລົງຊີວິດຕໍ່ໄປ ແລະ ເພື່ອເຂົາອາດຈະມີຊີວິດຢູ່ໃນລັກສະນະທີ່ດີກວ່າເກົ່າ. ພຣະອົງຊ່ວຍມະນຸດໃຫ້ລອດພົ້ນຈາກຄວາມຜິດບາບ ເພື່ອເຂົາຈະບໍ່ເປັນຄົນຊົ່ວຊ້າ ແລະ ບໍ່ດຳລົງຊີວິດຢູ່ໃນແດນມໍລະນາ ແລະ ນາລົກອີກຕໍ່ໄປ ແລະ ໂດຍການຊ່ວຍມະນຸດໃຫ້ພົ້ນຈາກແດນມໍລະນາ ແລະ ນາລົກ, ພຣະເຢຊູເຮັດໃຫ້ມະນຸດສືບຕໍ່ດຳລົງຊີວິດຕໍ່ໄປ. ບັດນີ້, ຍຸກສຸດທ້າຍໄດ້ມາເຖິງແລ້ວ. ພຣະເຈົ້າຈະທຳລາຍລ້າງມະນຸດ ແລະ ທຳລາຍມະນຸດຊາດຢ່າງບໍລິບູນ ນັ້ນກໍຄື ພຣະອົງຈະປ່ຽນແປງແນວຄິດກະບົດຂອງມະນຸດຊາດ. ດ້ວຍເຫດຜົນນີ້, ມັນຈຶ່ງເປັນໄປບໍ່ໄດ້ທີ່ຈະໃຫ້ພຣະເຈົ້າສິ້ນສຸດຍຸກນັ້ນ ຫຼື ສຳເລັດແຜນການຄຸ້ມຄອງຫົກພັນປີຂອງພຣະອົງໂດຍອຸປະນິໄສທີ່ເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກໃນອະດີດ. ແຕ່ລະຍຸກເປັນຈຸດເດັ່ນພິເສດໃນການເປັນຕົວແທນໃຫ້ກັບອຸປະນິໄສຂອງພຣະເຈົ້າ ແລະ ແຕ່ລະຍຸກກໍມີພາລະກິດທີ່ພຣະເຈົ້າຄວນກະທຳ. ສະນັ້ນ, ພາລະກິດທີ່ພຣະເຈົ້າກະທຳດ້ວຍຕົວພຣະອົງເອງໃນແຕ່ລະຍຸກຈຶ່ງມີການສະແດງອອກເຖິງອຸປະນິໄສທີ່ແທ້ຈິງຂອງພຣະອົງ ແລະ ທັງພຣະນາມ ແລະ ພາລະກິດທີ່ພຣະເຈົ້າ ກະທຳກໍປ່ຽນແປງໄປຕາມຍຸກ, ທຸກສິ່ງເປັນສິ່ງທີ່ໃໝ່ທັງໝົດ. ໃນລະຫວ່າງຍຸກແຫ່ງພຣະບັນຍັດ, ພາລະກິດແຫ່ງການນຳພາມະນຸດແມ່ນຖືກປະຕິບັດພາຍໃຕ້ພຣະນາມຂອງພຣະເຢໂຮວາ ແລະ ພ້ອມດຽວກັນນັ້ນ ພາລະກິດຂັ້ນຕອນທຳອິດກໍຖືກລິເລີ່ມຂຶ້ນເທິງແຜ່ນດິນໂລກ. ໃນຂັ້ນຕອນນີ້, ພາລະກິດໄດ້ປະກອບດ້ວຍການສ້າງພຣະວິຫານ ແລະ ແທ່ນບູຊາ ແລະ ການນຳໃຊ້ກົດໝາຍເພື່ອນຳພາປະຊາຊົນອິດສະຣາເອນ ແລະ ເພື່ອປະຕິບັດພາລະກິດທ່າມກາງພວກເຂົາ. ການນຳພາປະຊາຊົນອິດສະຣາເອນ, ພຣະອົງໄດ້ເລີ່ມຕົ້ນສ້າງພື້ນຖານສຳລັບພາລະກິດຂອງພຣະອົງເທິງແຜ່ນດິນໂລກ. ຈາກພື້ນຖານນີ້, ພຣະອົງຂະຫຍາຍພາລະກິດຂອງພຣະອົງນອກເໜືອອິດສະຣາເອນ ເຊິ່ງເວົ້າໄດ້ວ່າ ເລີ່ມຕົ້ນຈາກອິດສະຣາເອນ ພຣະອົງຂະຫຍາຍພາລະກິດຂອງພຣະອົງອອກໄປທາງນອກ ເພື່ອຄົນຮຸ່ນຕໍ່ມາຈຶ່ງໄດ້ຄ່ອຍໆຮຽນຮູ້ວ່າພຣະເຢໂຮວາເປັນພຣະເຈົ້າ ແລະ ພຣະເຢໂຮວາຄືຜູ້ທີ່ສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທັງປວງ ແລະ ພຣະເຢໂຮວາເອງເປັນຜູ້ສ້າງສິ່ງຊົງສ້າງທັງປວງ. ພຣະອົງຂະຫຍາຍພາລະກິດຂອງ

ພຣະອົງອອກໄປທາງນອກຜ່ານທາງປະຊາຊົນອິດສະຣາເອນ. ດິນແດນອິດສະຣາເອນແມ່ນສະຖານທີ່ສັກສິດແຫ່ງທຳອິດຂອງພາລະກິດຂອງພຣະເຢໂຮວາເທິງແຜ່ນດິນໂລກ ແລະ ຢູ່ໃນດິນແດນອິດສະຣາເອນນີ້ເອງທີ່ພຣະເຈົ້າສະເດັດໄປປະຕິບັດພາລະກິດເທິງແຜ່ນດິນໂລກ. ນັ້ນແມ່ນພາລະກິດໃນຍຸກແຫ່ງພຣະບັນຍັດ. ໃນລະຫວ່າງຍຸກພຣະຄຸນແລ້ວ, ພຣະເຢຊູ ເປັນພຣະເຈົ້າທີ່ຊ່ວຍມະນຸດໃຫ້ລອດພົ້ນ. ສິ່ງທີ່ພຣະອົງມີ ແລະ ເປັນ ແມ່ນຄວາມກະລຸນາ, ຄວາມຮັກ, ຄວາມເມດຕາ, ຄວາມອົດກັ້ນ, ຄວາມອົດທົນ, ຄວາມຖ່ອມຕົນ, ຄວາມເປັນຫ່ວງ ແລະ ການໂຍະຍານ ແລະ ພາລະກິດຫຼາຍຢ່າງທີ່ພຣະອົງປະຕິບັດແມ່ນເພື່ອເຫັນແກ່ການໄຖ່ບາບຂອງມະນຸດ. ອຸປະນິໄສຂອງພຣະອົງແມ່ນຄວາມເມດຕາ ແລະ ຄວາມຮັກ ແລະ ຍ້ອນພຣະອົງເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກ, ພຣະອົງຈຶ່ງຖືກຄຶງເທິງໄມ້ກາງແຂນເພື່ອມະນຸດ ເພື່ອສະແດງວ່າ ພຣະເຈົ້າຮັກມະນຸດເໝືອນກັບພຣະອົງເອງຮັກຫຼາຍຈົນພຣະອົງຍອມຖວາຍຕົວພຣະອົງເອງທັງໝົດ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະນາມຂອງພຣະເຈົ້າແມ່ນພຣະເຢຊູ, ເວົ້າໄດ້ວ່າ ພຣະເຈົ້າເປັນພຣະເຈົ້າທີ່ຊ່ວຍມະນຸດ ແລະ ພຣະອົງເປັນພຣະເຈົ້າທີ່ເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກ. ພຣະເຈົ້າຢູ່ກັບມະນຸດ. ຄວາມຮັກຂອງພຣະອົງ ແລະ ຄວາມລອດພົ້ນຂອງພຣະອົງຕິດຕາມມະນຸດທຸກຄົນ. ມີພຽງແຕ່ການຍອມຮັບພຣະນາມຂອງພຣະເຢຊູ ແລະ ການຊົງສະຖິດຂອງພຣະອົງເທົ່ານັ້ນ ມະນຸດຈຶ່ງສາມາດຮັບເອົາສັນຕິສຸກ ແລະຄວາມປິຕິຍິນດີໄດ້, ຮັບເອົາການອວຍພອນຂອງພຣະອົງ, ຮັບເອົາພຣະຄຸນທີ່ຫຼວງຫຼາຍ ແລະນັບບໍ່ຖ້ວນຂອງພຣະອົງ ແລະ ຄວາມລອດພົ້ນຂອງພຣະອົງ. ຜ່ານການຖືກຄຶງເທິງໄມ້ກາງແຂນຂອງພຣະເຢຊູ, ທຸກຄົນທີ່ຕິດຕາມພຣະອົງໄດ້ຮັບຄວາມລອດພົ້ນ ແລະ ຖືກອະໄພຄວາມຜິດບາບຂອງພວກເຂົາ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຢຊູເປັນພຣະນາມຂອງພຣະເຈົ້າ. ເວົ້າໄດ້ອີກວ່າພາລະກິດໃນຍຸກແຫ່ງພຣະຄຸນແມ່ນຖືກປະຕິບັດພາຍໃຕ້ພຣະນາມຂອງພຣະເຢຊູເປັນຫຼັກ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຈົ້າຖືກເອີ້ນວ່າ ພຣະເຢຊູ. ພຣະອົງໄດ້ຮັບຂັ້ນຕອນຂອງພາລະກິດໃໝ່ທີ່ຢູ່ນອກເໜືອພຣະສັນຍາເດີມ ແລະ ພາລະກິດຂອງພຣະອົງກໍສິ້ນສຸດພ້ອມກັບການຖືກຄຶງເທິງໄມ້ກາງແຂນ. ນີ້ແມ່ນພາລະກິດທັງໝົດຂອງພຣະອົງ. ສະນັ້ນ, ໃນລະຫວ່າງຍຸກແຫ່ງພຣະບັນຍັດພຣະເຢໂຮວາແມ່ນພຣະນາມຂອງພຣະເຈົ້າ ແລະ ໃນຍຸກແຫ່ງພຣະຄຸນ ພຣະນາມຂອງພຣະເຢຊູເປັນຕົວແທນໃຫ້ກັບພຣະເຈົ້າ. ໃນລະຫວ່າງຍຸກສຸດທ້າຍ, ພຣະນາມຂອງພຣະອົງແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດ ອົງຊົງລິດທານຸພາບສູງສຸດ, ຜູ້ໃຊ້ລິດອຳນາດຂອງພຣະອົງເພື່ອນຳພາມະນຸດ, ເອົາຊະນະມະນຸດ ແລະ ຮັບເອົາມະນຸດ ແລະ ໃນທີ່ສຸດກໍຄື ນຳເອົາຍຸກໄປສູ່ຈຸດສິ້ນສຸດຂອງມັນ. ໃນແຕ່ລະຍຸກ, ໃນແຕ່ລະຂັ້ນຕອນຂອງພາລະກິດຂອງພຣະອົງ, ອຸປະນິໄສຂອງພຣະເຈົ້າແມ່ນເຫັນໄດ້ຊັດເຈນ.

ໃນຕົ້ນເດີມນັ້ນ ການນຳພາມະນຸດໃນລະຫວ່າງຍຸກພຣະບັນຍັດແຫ່ງພຣະສັນຍາເດີມແມ່ນຄືກັບການນຳພາຊີວິດເດັກນ້ອຍ. ມະນຸດໃນຕອນແລກເລີ່ມນັ້ນ ເປັນເດັກເກີດໃໝ່ຂອງພຣະເຢໂຮວາ; ພວກເຂົາແມ່ນຊົນຊາດອິດສະຣາເອນ. ພວກເຂົາບໍ່ເຂົ້າໃຈວ່າ ຈະເຄົາລົບບູຊາພຣະເຈົ້າ ແລະ ໃຊ້ຊີວິດເທິງແຜ່ນດິນໂລກນີ້ດ້ວຍວິທີໃດ. ເຊິ່ງໝາຍຄວາມວ່າ ພຣະເຢໂຮວາສ້າງມະນຸດ ນັ້ນກໍຄື ພຣະອົງສ້າງ

ອາດາມ ແລະ ເອວາ ແຕ່ພຣະອົງບໍ່ໄດ້ມອບຄວາມສາມາດໃຫ້ພວກເຂົາເຂົ້າໃຈວິທີທີ່ຈະເຄົາລົບພຣະເຢໂຮວາແນວໃດ ຫຼື ປະຕິບັດຕາມພຣະບັນຍັດຂອງພຣະເຢໂຮວາເທິງແຜ່ນດິນໂລກແນວໃດ. ຫາກປາສະຈາກການຊີ້ນຳໂດຍກົງຈາກພຣະເຢໂຮວາແລ້ວ ບໍ່ມີຜູ້ໃດສາມາດຮູ້ສິ່ງນີ້ໂດຍກົງ, ເພາະວ່າໃນຕົ້ນເດີມນັ້ນ ມະນຸດບໍ່ມີຄວາມສາມາດແບບນັ້ນ. ມະນຸດພຽງຮູ້ແຕ່ວ່າພຣະເຢໂຮວາເປັນພຣະເຈົ້າ ແຕ່ສຳລັບວິທີເຄົາລົບພຣະອົງ, ການປະພຶດແບບໃດທີ່ເອີ້ນວ່າເປັນການເຄົາລົບພຣະອົງ, ດ້ວຍຄວາມຄິດແບບໃດທີ່ຕົນຈະເຄົາລົບພຣະອົງ ຫຼື ມີສິ່ງໃດແດ່ທີ່ຈະຖວາຍໃນການເຄົາລົບພຣະອົງ ມະນຸດບໍ່ມີຄວາມຄິດໃນດ້ານນີ້ເລີຍ. ມະນຸດພຽງຮູ້ຈັກຊື່ນຊົມໃນສິ່ງທີ່ສາມາດຊື່ນຊົມໄດ້ໃນບັນດາສັບພະທຸກສິ່ງທີ່ສ້າງຂຶ້ນໂດຍພຣະເຢໂຮວາ ແຕ່ສຳລັບວິທີການໃຊ້ຊີວິດແບບໃດໃນແຜ່ນດິນໂລກຈຶ່ງຈະຄູ່ຄວນເປັນບຸກຄົນຂອງພຣະເຈົ້າ, ມະນຸດແມ່ນບໍ່ຮູ້ຫຍັງຈັກຢ່າງເລີຍ. ຫາກປາສະຈາກຄົນແນະນຳພວກເຂົາ, ຫາກປາສະຈາກຄົນຊີ້ນຳພວກເຂົາເປັນການສ່ວນຕົວ ມະນຸດຊາດຈະບໍ່ມີຊີວິດທີ່ເໝາະສົມກັບການເປັນມະນຸດຢ່າງຖືກຕ້ອງ ແຕ່ຈະເປັນພຽງຄົນທີ່ຖືກຊາຕານຄວບຄຸມຢ່າງລັບໆ. ພຣະເຢໂຮວາສ້າງມະນຸດຊາດ ເວົ້າໄດ້ວ່າ ພຣະອົງສ້າງບັນພະບຸລຸດຂອງມະນຸດຊາດ, ອາດາມ ແລະ ເອວາ, ແຕ່ພຣະອົງບໍ່ໄດ້ປະທານຄວາມສະຫຼາດ ຫຼື ສະຕິປັນຍາເພີ່ມເຕີມໃຫ້ກັບພວກເຂົາ. ເຖິງແມ່ນວ່າພວກເຂົາໄດ້ດຳລົງຊີວິດຢູ່ເທິງແຜ່ນດິນໂລກແລ້ວ, ພວກເຂົາກໍເກືອບຈະບໍ່ເຂົ້າໃຈຫຍັງເລີຍ. ດ້ວຍເຫດນັ້ນ ພາລະກິດຂອງພຣະເຢໂຮວາໃນການສ້າງມະນຸດກໍສຳເລັດແຕ່ພຽງເຄິ່ງດຽວ ແລະ ແຮງໄກຈາກຄວາມສົມບູນ. ພຣະອົງພຽງແຕ່ສ້າງແບບຢ່າງຂອງມະນຸດຈາກດິນໜຽວ ແລະ ມອບລົມຫາຍໃຈຂອງພຣະອົງໃຫ້ກັບມັນ, ແຕ່ບໍ່ໄດ້ປະທານຄວາມເຕັມໃຈຢ່າງພຽງພໍໃຫ້ກັບມະນຸດເພື່ອໃຫ້ພວກເຂົາໄດ້ເຄົາລົບບູຊາພຣະອົງ. ໃນຕອນເລີ່ມຕົ້ນນັ້ນ ມະນຸດບໍ່ມີຄວາມຄິດທີ່ຈະເຄົາລົບນັບຖືພຣະອົງ ຫຼື ຢຳເກງພຣະອົງ. ມະນຸດພຽງແຕ່ຮູ້ວິທີການຟັງພຣະທຳຂອງພຣະອົງ ແຕ່ບໍ່ມີຄວາມຮູ້ພື້ນຖານກ່ຽວກັບຊີວິດເທິງແຜ່ນດິນໂລກ ແລະ ກ່ຽວກັບກົດລະບຽບທຳມະດາຂອງຊີວິດມະນຸດ. ດ້ວຍເຫດນັ້ນ ເຖິງແມ່ນວ່າ ພຣະເຢໂຮວາໄດ້ສ້າງຜູ້ຊາຍ ແລະ ຜູ້ຍິງ ແລະ ສຳເລັດແຜນການພາຍໃນເຈັດມື້, ນັ້ນກໍບໍ່ໄດ້ໝາຍຄວາມວ່າ ພຣະອົງໄດ້ສຳເລັດໃນການສ້າງມະນຸດ ຍ້ອນວ່າ ມະນຸດຍັງເປັນແກບເຂົ້າ ແລະ ຂາດຄວາມເປັນຈິງຂອງການເປັນມະນຸດຢູ່. ມະນຸດຮູ້ພຽງແຕ່ວ່າ ພຣະເຢໂຮວາສ້າງມະນຸດຊາດ, ແຕ່ເຂົາບໍ່ຮູ້ຫຍັງເລີຍກ່ຽວກັບການປະຕິບັດຕາມພຣະທຳ ຫຼື ພຣະບັນຍັດຂອງພຣະເຢໂຮວາ. ດັ່ງນັ້ນ ຫຼັງຈາກມະນຸດຊາດເກີດມາ, ພາລະກິດຂອງພຣະເຢໂຮວາຍັງຫ່າງໄກຈາກຄວາມສຳເລັດ. ພຣະອົງຍັງຕ້ອງໄດ້ນຳມະນຸດໃຫ້ມາຫາພຣະອົງຢ່າງແທ້ຈິງ ເພື່ອພວກເຂົາຈະສາມາດດຳລົງຊີວິດຮ່ວມກັນເທິງແຜ່ນດິນໂລກ ແລະ ເຄົາລົບບູຊາພຣະອົງ ແລະ ດ້ວຍການຊີ້ນຳຂອງພຣະອົງ ພວກເຂົາຈະໄດ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງແຫ່ງການດຳລົງຊີວິດແບບມະນຸດປົກກະຕິເທິງແຜ່ນດິນໂລກ. ພຽງແຕ່ເມື່ອນັ້ນ ພາລະກິດທີ່ດຳເນີນພາຍໃຕ້ພຣະນາມຂອງພຣະເຢໂຮວາຈຶ່ງຈະສຳເລັດຜົນຢ່າງສົມບູນ, ນັ້ນກໍຄື ພຽງແຕ່ເມື່ອນັ້ນ ພາລະກິດແຫ່ງການສ້າງໂລກຂອງພຣະເຢໂຮວາຈຶ່ງຈະສິ້ນສຸດລົງຢ່າງສົມບູນ. ສະນັ້ນ ຫຼັງຈາກສ້າງມະນຸດພຣະອົງຕ້ອງໄດ້ນຳພາຊີວິດມະນຸດຊາດເທິງແຜ່ນດິນໂລກເປັນເວລາຫຼາຍພັນປີ ເພື່ອມະນຸດຊາດຈະໄດ້

ປະຕິບັດຕາມພຣະດຳລັດ ແລະ ພຣະບັນຍັດຂອງພຣະອົງ ແລະ ເຂົ້າຮ່ວມໃນກິດຈະກຳຕ່າງໆຂອງຊີວິດໃນແບບມະນຸດປົກກະຕິເທິງແຜ່ນດິນໂລກ. ພຽງແຕ່ເມື່ອນັ້ນ ພາລະກິດຂອງພຣະເຢໂຮວາຈຶ່ງຈະສຳເລັດຜົນຢ່າງສົມບູນ. ພຣະອົງຮັບພາລະກິດນີ້ຫຼັງຈາກທີ່ໄດ້ສ້າງມະນຸດຊາດ ແລະ ສືບຕໍ່ຈົນເຖິງສະໄໝຂອງຢາໂຄບ ເຊິ່ງເປັນເວລາທີ່ພຣະອົງໄດ້ເຮັດໃຫ້ບຸດຊາຍສິບສອງຄົນຂອງຢາໂຄບກາຍເປັນສິບສອງຊົນເຜົ່າຂອງອິດສະຣາເອນ. ຈາກເວລານັ້ນເປັນຕົ້ນໄປ, ປະຊາຊົນອິດສະຣາເອນທັງໝົດໄດ້ກາຍເປັນມະນຸດຊາດທີ່ພຣະອົງນຳພາຢ່າງເປັນທາງການເທິງແຜ່ນດິນໂລກ ແລະ ອິດສະຣາເອນກໍກາຍມາເປັນສະຖານທີ່ພິເສດຢູ່ເທິງແຜ່ນດິນໂລກທີ່ພຣະອົງປະຕິບັດພາລະກິດຂອງພຣະອົງ. ພຣະເຢໂຮວາໄດ້ສ້າງກຸ່ມຄົນເຫຼົ່ານີ້ໃຫ້ເປັນກຸ່ມຄົນທຳອິດທີ່ພຣະອົງປະຕິບັດພາລະກິດຂອງພຣະອົງຢ່າງເປັນທາງການ ແລະ ພຣະອົງໄດ້ເຮັດໃຫ້ດິນແດນອິດສະຣາເອນທັງໝົດເປັນຈຸດກຳເນີດພາລະກິດຂອງພຣະອົງ ໂດຍໃຊ້ພວກເຂົາໃຫ້ເປັນຈຸດເລີ່ມຕົ້ນຂອງພາລະກິດທີ່ຍິ່ງໃຫຍ່ກວ່າເດີມ ເພື່ອວ່າທຸກຄົນທີ່ເກີດຈາກພຣະອົງເທິງແຜ່ນດິນໂລກຈະຮູ້ຈັກວິທີການເຄົາລົບພຣະອົງ ແລະ ວິທີການດຳລົງຊີວິດເທິງແຜ່ນດິນໂລກ. ດ້ວຍເຫດນັ້ນ ການກະທຳຂອງຊາວອິດສະຣາເອນກໍໄດ້ກາຍມາເປັນຕົວຢ່າງທີ່ປະຊາຊົນຂອງຕ່າງຊາດປະຕິບັດຕາມ ແລະ ສິ່ງທີ່ກ່າວທ່າມກາງປະຊາຊົນອິດສະຣາເອນກໍກາຍມາເປັນພຣະທຳທີ່ຊາວຕ່າງຊາດຟັງ. ຍ້ອນພວກເຂົາເປັນຄົນທຳອິດທີ່ໄດ້ຮັບກົດເກນ ແລະ ພຣະບັນຍັດຕ່າງໆຂອງພຣະເຢໂຮວາ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງເປັນຄົນທຳອິດທີ່ຮູ້ຈັກວິທີການເຄົາລົບຕໍ່ແນວທາງຂອງພຣະເຢໂຮວາ. ພວກເຂົາເປັນບັນພະບຸລຸດຂອງມະນຸດຊາດຜູ້ເຊິ່ງຮູ້ຈັກແນວທາງຂອງພຣະເຢໂຮວາ ພ້ອມທັງເປັນຕົວແທນຂອງມະນຸດຊາດທີ່ພຣະເຢໂຮວາໄດ້ເລືອກໄວ້. ເມື່ອຍຸກແຫ່ງພຣະຄຸນມາເຖິງ, ພຣະເຢໂຮວາກໍບໍ່ໄດ້ນຳພາມະນຸດໃນແນວທາງນີ້ອີກຕໍ່ໄປ. ມະນຸດໄດ້ເຮັດບາບ ແລະ ປະຖິ້ມຕົນເອງໃຫ້ກັບຄວາມຜິດບາບ ແລະ ດ້ວຍເຫດນັ້ນ ພຣະອົງກໍເລີ່ມຕົ້ນຊ່ວຍເຫຼືອມະນຸດຈາກຄວາມຜິດບາບ. ດ້ວຍວິທີນີ້, ພຣະອົງ ຕິເຕືອນມະນຸດຈົນມະນຸດຖືກຊ່ວຍໃຫ້ລອດພົ້ນຈາກຄວາມຜິດບາບຢ່າງແທ້ຈິງ. ໃນຍຸກສຸດທ້າຍ, ມະນຸດໄດ້ຈົມລົງໃນຄວາມຊົ່ວຊ້າ ຈົນເຖິງຂັ້ນທີ່ວ່າ ພາລະກິດຂັ້ນຕອນນີ້ສາມາດໄດ້ຮັບການປະຕິບັດຜ່ານການພິພາກສາ ແລະ ການຂ້ຽນຕີເທົ່ານັ້ນ. ພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ ພາລະກິດຈຶ່ງຈະສຳເລັດໄດ້. ສິ່ງນີ້ໄດ້ກາຍເປັນພາລະກິດຂອງຫຼາຍໆຍຸກ. ເວົ້າອີກຢ່າງກໍຄືພຣະເຈົ້າໃຊ້ພຣະນາມຂອງພຣະອົງ, ພາລະກິດຂອງພຣະອົງ ແລະ ພາບລັກສະນະທີ່ແຕກຕ່າງກັນຂອງພຣະເຈົ້າເພື່ອຈັດແບ່ງແຕ່ລະຍຸກອອກຈາກກັນ ແລະ ເພື່ອສ້າງການປ່ຽນແປງລະຫວ່າງຍຸກເຫຼົ່ານັ້ນ; ພຣະນາມຂອງພຣະເຈົ້າ ແລະ ພາລະກິດຂອງພຣະອົງຈຶ່ງໄດ້ເປັນຕົວແທນໃຫ້ກັບຍຸກຂອງພຣະອົງ ແລະ ເປັນຕົວແທນໃຫ້ກັບພາລະກິດຂອງພຣະອົງໃນແຕ່ລະຍຸກ. ສົມມຸດວ່າ ພາລະກິດຂອງພຣະເຈົ້າໃນແຕ່ລະຍຸກແມ່ນຄືກັນ ແລະ ພຣະອົງກໍຖືກເອີ້ນໂດຍພຣະນາມເດີມຢູ່ຕະຫຼອດ, ມະນຸດຈະຮູ້ຈັກພຣະອົງໄດ້ແນວໃດ? ພຣະເຈົ້າຕ້ອງຖືກເອີ້ນວ່າ ພຣະເຢໂຮວາ ແລະ ນອກຈາກພຣະເຈົ້າທີ່ຖືກເອີ້ນວ່າພຣະເຢໂຮວາແລ້ວ, ຜູ້ໃດກໍຕາມທີ່ຖືກເອີ້ນໂດຍຊື່ອື່ນໆບໍ່ແມ່ນພຣະເຈົ້າ. ຫຼືບໍ່ດັ່ງນັ້ນ ພຣະເຈົ້າກໍເປັນໄດ້ພຽງແຕ່ພຣະເຢຊູ ແລະ ນອກຈາກພຣະນາມຂອງພຣະເຢຊູແລ້ວ ພຣະອົງບໍ່ສາມາດຖືກເອີ້ນໂດຍ

ພຣະນາມອື່ນໆໄດ້; ນອກຈາກພຣະເຢຊູແລ້ວ, ພຣະເຢໂຮວາບໍ່ແມ່ນພຣະເຈົ້າ ແລະ ພຣະເຈົ້າອົງຊົງລິດທານຸພາບສູງສຸດກໍບໍ່ແມ່ນພຣະເຈົ້າເຊັ່ນກັນ. ມະນຸດເຊື່ອວ່າ ເປັນຄວາມຈິງທີ່ພຣະເຈົ້າຊົງມີລິດທານຸພາບສູງສຸດ, ແຕ່ພຣະເຈົ້າກໍເປັນພຽງພຣະເຈົ້າທີ່ຢູ່ກັບມະນຸດ ແລະ ພຣະອົງຕ້ອງຖືກເອີ້ນວ່າ ພຣະເຢຊູ, ຍ້ອນພຣະເຈົ້າຢູ່ກັບມະນຸດ. ການເຮັດແບບນີ້ກໍຄືກັບການປະຕິບັດຕາມຄຳສັ່ງສອນ ແລະ ການຈຳກັດພຣະເຈົ້າໃຫ້ຢູ່ໃນຂອບເຂດໃດໜຶ່ງ. ສະນັ້ນ ໃນແຕ່ລະຍຸກ, ພາລະກິດທີ່ພຣະເຈົ້າປະຕິບັດ, ພຣະນາມທີ່ພຣະອົງຖືກເອີ້ນ ແລະ ພາບລັກສະນະທີ່ພຣະອົງນຳໃຊ້ ເຊິ່ງເປັນພາລະກິດທີ່ພຣະອົງປະຕິບັດໃນແຕ່ລະຂັ້ນຕອນຈົນມາເຖິງປັດຈຸບັນ, ສິ່ງເຫຼົ່ານີ້ບໍ່ໄດ້ປະຕິບັດຕາມກົດລະບຽບແມ່ນແຕ່ໜ້ອຍດຽວ ແລະ ບໍ່ໄດ້ຂຶ້ນກັບຂໍ້ຈຳກັດໃດໜຶ່ງເລີຍ. ພຣະອົງເປັນພຣະເຢໂຮວາ ແລະ ພຣະອົງຍັງເປັນພຣະເຢຊູອີກດ້ວຍ ພ້ອມທັງເປັນພຣະເມຊີອາ ແລະ ພຣະເຈົ້າອົງຊົງລິດທານຸພາບສູງສຸດ. ພາລະກິດຂອງພຣະອົງສາມາດຜ່ານການປ່ຽນແປງເທື່ອລະໜ້ອຍ ໂດຍສອດຄ່ອງກັບການປ່ຽນແປງໃນພຣະນາມຂອງພຣະອົງ. ບໍ່ມີພຣະນາມໃດໜຶ່ງທີ່ສາມາດເປັນຕົວແທນໃຫ້ກັບພຣະອົງໄດ້ຢ່າງສົມບູນ, ແຕ່ພຣະນາມທຸກຢ່າງທີ່ພຣະອົງຖືກເອີ້ນແມ່ນສາມາດເປັນຕົວແທນໃຫ້ກັບພຣະອົງ ແລະ ພາລະກິດທີ່ພຣະອົງປະຕິບັດໃນແຕ່ລະຍຸກກໍເປັນຕົວແທນໃຫ້ກັບອຸປະນິໄສຂອງພຣະອົງ. ລອງສົມມຸດວ່າ ເມື່ອຍຸກສຸດທ້າຍໄດ້ມາເຖິງ, ພຣະເຈົ້າທີ່ເຈົ້າເຫັນຍັງເປັນພຣະເຢຊູ ແລະ ຍິ່ງໄປກວ່ານັ້ນ ພຣະອົງກຳລັງຂີ່ເທິງເມກສີຂາວ ແລະ ພຣະອົງຍັງມີຮູບຮ່າງຂອງພຣະເຢຊູ ແລະ ພຣະທຳທີ່ພຣະອົງກ່າວກໍຍັງເປັນພຣະທຳຂອງພຣະເຢຊູ ນັ້ນຄື "ພວກເຈົ້າຄວນຮັກເພື່ອນບ້ານຂອງພວກເຈົ້າເໝືອນກັບຕົວພວກເຈົ້າເອງ, ພວກເຈົ້າຄວນອົດອາຫານ ແລະ ອະທິຖານ, ຮັກສັດຕູຂອງພວກເຈົ້າເໝືອນດັ່ງທີ່ພວກເຈົ້າຮັກຊີວິດຂອງຕົນເອງ, ອົດກັ້ນກັບຄົນອື່ນ ແລະ ອົດທົນ ແລະ ຖ່ອມຕົນ. ພວກເຈົ້າຕ້ອງເຮັດທຸກສິ່ງເຫຼົ່ານີ້ກ່ອນທີ່ພວກເຈົ້າຈະສາມາດກາຍມາເປັນສາວົກຂອງເຮົາ. ແລ້ວໂດຍການເຮັດສິ່ງເຫຼົ່ານີ້, ພວກເຈົ້າຈະໄດ້ເຂົ້າສູ່ອານາຈັກຂອງເຮົາ". ສິ່ງນີ້ບໍ່ແມ່ນເປັນຂອງພາລະກິດໃນຍຸກແຫ່ງພຣະຄຸນບໍ? ສິ່ງທີ່ພຣະອົງກ່າວບໍ່ແມ່ນແນວທາງໃນຍຸກແຫ່ງພຣະຄຸນບໍ? ພວກເຈົ້າຈະຮູ້ສຶກແນວໃດ ຖ້າພວກເຈົ້າຕ້ອງໄດ້ຍິນພຣະທຳເຫຼົ່ານີ້? ພວກເຈົ້າຈະບໍ່ຮູ້ສຶກວ່າ ນີ້ຍັງເປັນພາລະກິດຂອງພຣະເຢຊູບໍ? ສິ່ງນີ້ຈະບໍ່ແມ່ນການເຮັດພາລະກິດຄືນໃໝ່ອີກຄັ້ງບໍ? ມະນຸດຈະສາມາດຄົ້ນພົບຄວາມສຸກໃນສິ່ງນີ້ໄດ້ບໍ? ພວກເຈົ້າຈະພຽງຮູ້ສຶກວ່າ ພາລະກິດຂອງພຣະເຈົ້າຍັງຄືເກົ່າບໍ່ແຕກຕ່າງຫຍັງກັບໃນຕອນນີ້ ແລະ ບໍ່ກ້າວໜ້າໄປໃສເລີຍ. ພຣະອົງພຽງແຕ່ມີລິດອຳນາດຢ່າງມາກມາຍ ແລະ ບໍ່ມີພາລະກິດໃໝ່ໃຫ້ປະຕິບັດອີກຕໍ່ໄປ ແລະ ພຣະອົງໄດ້ໃຊ້ລິດອຳນາດຂອງພຣະອົງຈົນເຖິງທີ່ສຸດແລ້ວ. ສອງພັນປີກ່ອນແມ່ນຍຸກແຫ່ງພຣະຄຸນ ແລະ ສອງພັນປີຕໍ່ມາ ພຣະອົງຍັງຄົງເທດສະໜາກ່ຽວກັບແນວທາງໃນຍຸກແຫ່ງພຣະຄຸນ ແລະ ຍັງເຮັດໃຫ້ຜູ້ຄົນກັບໃຈຄືນໃໝ່ຢູ່. ຜູ້ຄົນກໍຈະເວົ້າວ່າ "ພຣະເຈົ້າ, ພຣະອົງພຽງແຕ່ມີລິດອຳນາດອັນຍິ່ງໃຫຍ່. ຂ້ານ້ອຍເຊື່ອວ່າ ພຣະອົງມີສະຕິປັນຍາ ແຕ່ວ່າ ພຣະອົງຮູ້ພຽງແຕ່ການອົດກັ້ນ ແລະ ເປັນຫ່ວງແຕ່ກັບການອົດທົນ, ພຣະອົງຮູ້ພຽງແຕ່ຮັກສັດຕູຂອງພຣະອົງ ແລະ ບໍ່ມີສິ່ງອື່ນອີກເລີຍ". ໃນຄວາມຄິດຂອງມະນຸດ, ພຣະເຈົ້າກໍຈະເປັນຄືກັບຕອນທີ່ພຣະອົງຢູ່ໃນຍຸກແຫ່ງພຣະຄຸນຕະຫຼອດໄປ ແລະ ມະນຸດຈະເຊື່ອຢູ່ສະເໝີວ່າ ພຣະອົງ

ເຕັມໄປດ້ວຍຄວາມຮັກ ແລະ ຄວາມເມດຕາ. ເຈົ້າຄິດວ່າ ພາລະກິດຂອງພຣະເຈົ້າຈະຍ່າງເທິງພື້ນດິນຄືເກົ່າຢູ່ສະເໝີບໍ? ດ້ວຍເຫດນັ້ນ ພຣະອົງຈະບໍ່ຖືກຄຶງເທິງໄມ້ກາງແຂນໃນພາລະກິດຂັ້ນຕອນນີ້ຂອງພຣະອົງ ແລະ ທຸກສິ່ງທຸກຢ່າງທີ່ພວກເຈົ້າເຫັນ ແລະ ສຳຜັດກໍຈະບໍ່ຄືກັບສິ່ງທີ່ພວກເຈົ້າຈິນຕະນາການ ຫຼື ໄດ້ຍິນມາກ່ອນ. ໃນປັດຈຸບັນ, ພຣະເຈົ້າບໍ່ມີສ່ວນຮ່ວມກັບພວກຟາຣີຊາຍ ຫຼື ພຣະອົງບໍ່ຍອມໃຫ້ໂລກຮູ້ ແລະ ຄົນທີ່ຮູ້ຈັກພຣະອົງກໍມີແຕ່ພຽງພວກເຈົ້າ ຜູ້ເຊິ່ງຕິດຕາມພຣະອົງ ຍ້ອນພຣະອົງຈະບໍ່ຖືກຄຶງເທິງໄມ້ກາງແຂນອີກຄັ້ງ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຢຊູເທດສະໜາຢ່າງເປີດເຜີຍທົ່ວດິນແດນເພື່ອເຫັນແກ່ພາລະກິດແຫ່ງຂ່າວປະເສີດຂອງພຣະອົງ. ພຣະອົງມີສ່ວນຮ່ວມກັບພວກຟາຣີຊາຍຍ້ອນເຫັນແກ່ພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນ; ຖ້າພຣະອົງບໍ່ໄດ້ມີສ່ວນຮ່ວມກັບພວກຟາຣີຊາຍ ແລະ ຄົນທີ່ມີອຳນາດກໍບໍ່ເຄີຍຮູ້ຈັກກ່ຽວກັບພຣະອົງຈັກເທື່ອ, ພຣະອົງຈະຖືກກ່າວໂທດ, ຖືກທັກທ້ຽງ ແລະ ຖືກຄຶງເທິງໄມ້ກາງແຂນໄດ້ແນວໃດ? ສະນັ້ນ ພຣະອົງມີສ່ວນຮ່ວມກັບພວກຟາຣີຊາຍກໍເພື່ອເຫັນແກ່ການຖືກຄຶງເທິງໄມ້ກາງແຂນ. ໃນປັດຈຸບັນ, ພຣະອົງປະຕິບັດພາລະກິດຂອງພຣະອົງຢ່າງລັບໆເພື່ອຫຼີກເວັ້ນການທົດລອງ. ໃນການບັງເກີດເປັນມະນຸດສອງຄັ້ງຂອງພຣະເຈົ້າ, ພາລະກິດ ແລະ ຄວາມໝາຍແມ່ນແຕກຕ່າງກັນ ແລະ ສະພາບແວດລ້ອມກໍແຕກຕ່າງກັນ, ແລ້ວພາລະກິດທີ່ພຣະອົງປະຕິບັດຈະເປັນເໝືອນກັນທັງໝົດໄດ້ແນວໃດ?

ພຣະນາມຂອງພຣະເຢຊູທີ່ໝາຍຄວາມວ່າ "ພຣະເຈົ້າຢູ່ກັບພວກເຮົາ" ຈະສາມາດເປັນຕົວແທນໃຫ້ກັບອຸປະນິໄສທັງໝົດຂອງພຣະເຈົ້າໄດ້ບໍ? ມັນສາມາດອະທິບາຍກ່ຽວກັບພຣະເຈົ້າໄດ້ຢ່າງສົມບູນບໍ? ຖ້າມະນຸດເວົ້າວ່າ ພຣະເຈົ້າສາມາດຖືກເອີ້ນໄດ້ແຕ່ຊື່ ພຣະເຢຊູ ແລະ ບໍ່ມີຊື່ອື່ນເລີຍ ເພາະວ່າພຣະເຈົ້າບໍ່ສາມາດປ່ຽນແປງອຸປະນິໄສຂອງພຣະອົງໄດ້, ຄຳເວົ້າເຫຼົ່ານີ້ແມ່ນເປັນການໝິ່ນປະໝາດຢ່າງແນ່ນອນ! ເຈົ້າເຊື່ອວ່າ ມີພຽງແຕ່ພຣະນາມພຣະເຢຊູເທົ່ານັ້ນບໍ ເຊິ່ງໝາຍເຖິງພຣະເຈົ້າຢູ່ກັບພວກເຮົາທີ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ທັງໝົດ? ພຣະເຈົ້າອາດຈະຖືກເອີ້ນໂດຍຫຼາຍພຣະນາມ, ແຕ່ທ່າມກາງພຣະນາມເຫຼົ່ານີ້, ບໍ່ມີພຣະນາມໃດເລີຍທີ່ສາມາດສະຫຼຸບຄວາມໃຫ້ກັບພຣະເຈົ້າໄດ້ທັງໝົດ, ບໍ່ມີພຣະນາມໃດເລີຍທີ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ຢ່າງສົມບູນ. ດ້ວຍເຫດນັ້ນພຣະເຈົ້າຈຶ່ງມີຫຼາຍພຣະນາມ, ແຕ່ພຣະນາມເຫຼົ່ານີ້ບໍ່ສາມາດອະທິບາຍອຸປະນິໄສຂອງພຣະເຈົ້າໄດ້ຢ່າງສົມບູນ ຍ້ອນອຸປະນິໄສຂອງພຣະເຈົ້າອຸດົມສົມບູນຫຼາຍ ເຊິ່ງມັນຫຼາຍກວ່າຄວາມສາມາດຂອງມະນຸດທີ່ຈະຮູ້ຈັກພຣະອົງໄດ້ຢ່າງແທ້ຈິງ. ບໍ່ມີທາງທີ່ມະນຸດຈະໃຊ້ພາສາຂອງມະນຸດເພື່ອສະຫຼຸບຄວາມພຣະເຈົ້າໄດ້ຢ່າງສົມບູນ. ມະນຸດຊາດມີຄຳສັບທີ່ຈຳກັດ ເຊິ່ງໃຊ້ເພື່ອສະຫຼຸບຄວາມໃນສິ່ງທີ່ພວກເຂົາຮູ້ກ່ຽວກັບອຸປະນິໄສຂອງພຣະເຈົ້າ ເຊັ່ນ: ຍິ່ງໃຫຍ່, ເປັນຕານັບຖື, ອັດສະຈັນ, ບໍ່ສາມາດຢັ່ງເຖິງໄດ້, ສູງສຸດ, ສັກສິດ, ຊອບທຳ, ມີສະຕິປັນຍາ ແລະ ອື່ນໆອີກ. ມີຫຼາຍຄຳເວົ້າ! ຄຳສັບທີ່ຈຳກັດນີ້ບໍ່ສາມາດບັນລະຍາຍໄດ້ແມ່ນແຕ່ໜ້ອຍດຽວກ່ຽວກັບເລື່ອງມະນຸດເປັນພະຍານເຖິງອຸປະນິໄສຂອງພຣະເຈົ້າ. ເມື່ອເວລາຜ່ານໄປ, ມີຄຳເວົ້າຫຼາຍຄຳເພີ່ມຂຶ້ນທີ່ພວກເຂົາຄິດວ່າສາມາດບັນລະຍາຍເຖິງຄວາມຈິງໃຈໃນຫົວໃຈຂອງພວກເຂົາໄດ້ດີກວ່າ ເຊັ່ນ: ພຣະເຈົ້າຍິ່ງໃຫຍ່ຫຼາຍ! ພຣະເຈົ້າສັກສິດຫຼາຍ! ພຣະເຈົ້າເປັນ

ທີ່ຮັກຫຼາຍ! ໃນປັດຈຸບັນ, ຄຳເວົ້າແບບນີ້ຂອງມະນຸດແມ່ນຮ້າຍແຮງຈົນເຖິງຈຸດສູງສຸດແລ້ວ, ເຖິງຢ່າງໃດກໍຕາມ ມະນຸດກໍຍັງບໍ່ສາມາດສະແດງຕົວເອງອອກມາຢ່າງຊັດເຈນ. ດ້ວຍເຫດນັ້ນ ສຳລັບມະນຸດແລ້ວ ພຣະເຈົ້າມີຫຼາຍພຣະນາມ ແຕ່ພຣະອົງບໍ່ມີຊື່ຜູ້ໃດ ແລະ ນີ້ກໍຍ້ອນວ່າ ການເປັນຢູ່ຂອງພຣະອົງອຸດົມສົມບູນຫຼາຍ ແລະ ພາສາຂອງມະນຸດແມ່ນຕໍ່າຫຼາຍ. ຄຳເວົ້າ ຫຼື ພຣະນາມສະເພາະໃດໜຶ່ງແມ່ນບໍ່ມີຄວາມສາມາດທີ່ຈະເປັນຕົວແທນໃຫ້ກັບພຣະເຈົ້າທັງໝົດໄດ້, ແລ້ວເຈົ້າຄິດວ່າ ພຣະອົງຈະມີພຽງແຕ່ພຣະນາມດຽວໄດ້ບໍ? ພຣະເຈົ້າຍິ່ງໃຫຍ່ຫຼາຍ ແລະ ສັກສິດຫຼາຍ ແຕ່ເຈົ້າຈະບໍ່ຍອມໃຫ້ພຣະອົງປ່ຽນແປງພຣະນາມຂອງພຣະອົງໃນແຕ່ລະຍຸກໃໝ່ບໍ? ສະນັ້ນ, ໃນແຕ່ລະຍຸກທີ່ພຣະເຈົ້າປະຕິບັດພາລະກິດດ້ວຍຕົວພຣະອົງເອງ, ພຣະອົງໃຊ້ພຣະນາມທີ່ເໝາະສົມກັບຍຸກນັ້ນເພື່ອສະຫຼຸບພາລະກິດທີ່ພຣະອົງຕັ້ງໃຈທີ່ຈະປະຕິບັດ. ພຣະອົງນຳໃຊ້ພຣະນາມສະເພາະໃດໜຶ່ງ, ພຣະນາມທີ່ມີຄວາມໝາຍຊົ່ວຄາວ ເພື່ອເປັນຕົວແທນອຸປະນິໄສຂອງພຣະອົງໃນຍຸກນັ້ນໆ. ນີ້ແມ່ນພຣະເຈົ້າທີ່ໃຊ້ພາສາຂອງມະນຸດຊາດເພື່ອສະແດງອຸປະນິໄສຂອງພຣະອົງອອກມາ. ເຖິງຢ່າງນັ້ນກໍຕາມ ຫຼາຍຄົນທີ່ມີປະສົບການຝ່າຍວິນຍານ ແລະ ຜູ້ທີ່ໄດ້ເຫັນພຣະເຈົ້າດ້ວຍຕົນເອງຮູ້ສຶກວ່າ ສະເພາະ ພຣະນາມດຽວແມ່ນບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າທັງໝົດໄດ້, ໜ້າເສົ້າໃຈແທ້ໆ ນີ້ບໍ່ສາມາດຊ່ວຍຫຍັງໄດ້ເລີຍ, ສະນັ້ນມະນຸດຈຶ່ງບໍ່ເອີ້ນພຣະເຈົ້າໂດຍພຣະນາມອື່ນອີກຕໍ່ໄປ, ແຕ່ເອີ້ນພຣະອົງວ່າ "ພຣະເຈົ້າ". ຄືກັບວ່າຫົວໃຈຂອງມະນຸດແມ່ນເຕັມໄປດ້ວຍຄວາມຮັກ ແຕ່ທັງນັ້ນກໍເຊື່ອງຊ້ອນໄປດ້ວຍຂໍ້ຂັດແຍ້ງ, ຍ້ອນມະນຸດບໍ່ຮູ້ຈັກວິທີການອະທິບາຍກ່ຽວກັບພຣະເຈົ້າ. ສິ່ງທີ່ພຣະອົງເປັນແມ່ນອຸດົມສົມບູນຫຼາຍ, ບໍ່ມີວິທີໃດໜຶ່ງສາມາດບັນລະຍາຍກ່ຽວກັບສິ່ງນັ້ນໄດ້ແທ້ໆ. ບໍ່ມີພຣະນາມໃດທີ່ສາມາດສະຫຼຸບອຸປະນິໄສຂອງພຣະເຈົ້າໄດ້ ແລະ ບໍ່ມີພຣະນາມໃດທີ່ສາມາດບັນລະຍາຍທຸກສິ່ງທີ່ພຣະເຈົ້າມີ ແລະ ເປັນ. ຖ້າຄົນຖາມເຮົາວ່າ "ພຣະອົງໃຊ້ພຣະນາມໃດກັນແທ້?" ເຮົາຈະບອກກັບພວກເຂົາວ່າ "ພຣະເຈົ້າເປັນພຣະເຈົ້າ!" ນັ້ນບໍ່ແມ່ນພຣະນາມທີ່ດີທີ່ສຸດສຳລັບພຣະເຈົ້າບໍ? ນັ້ນບໍ່ແມ່ນການສະຫຼຸບຄວາມກ່ຽວກັບອຸປະນິໄສຂອງພຣະເຈົ້າທີ່ດີທີ່ສຸດບໍ? ເມື່ອເປັນແບບນີ້, ເປັນຫຍັງພວກເຈົ້າຈຶ່ງໃຊ້ຄວາມພະຍາຍາມຢ່າງມາກມາຍເພື່ອຊອກຫາພຣະນາມຂອງພຣະເຈົ້າ? ເປັນຫຍັງພວກເຈົ້າຈຶ່ງຕີສະໝອງຕົນເອງດ້ວຍໄມ້ຄ້ອນ ບໍ່ຍອມກິນເຂົ້າກິນນໍ້າ ແລະ ອົດຫຼັບອົດນອນ ເພື່ອເຫັນແກ່ຊື່ໃດໜຶ່ງ? ມື້ນັ້ນຈະມາເຖິງ ເມື່ອພຣະເຈົ້າບໍ່ໄດ້ຖືກເອີ້ນວ່າ ພຣະເຢໂຮວາ, ພຣະເຢຊູ ຫຼື ພຣະເມຊີອາ, ແຕ່ພຣະອົງຈະເປັນພຽງພຣະຜູ້ສ້າງ. ໃນເວລານັ້ນ, ຊື່ຕ່າງໆທີ່ພຣະອົງມີເທິງແຜ່ນດິນໂລກກໍຈະຈົບສິ້ນລົງ, ຍ້ອນວ່າ ພາລະກິດຂອງພຣະອົງເທິງແຜ່ນດິນໂລກຈະສິ້ນສຸດລົງ ດ້ວຍເຫດນັ້ນ ພຣະນາມຂອງພຣະອົງກໍຈະບໍ່ມີອີກຕໍ່ໄປ. ເມື່ອທຸກສິ່ງມາຢູ່ພາຍໃຕ້ອຳນາດຂອງພຣະຜູ້ສ້າງ, ພຣະອົງຈະຈຳເປັນຫຍັງກັບພຣະນາມທີ່ເໝາະສົມຢ່າງສູງສົ່ງແຕ່ບໍ່ສົມບູນນັ້ນ? ເຈົ້າຈະຍັງສະແຫວງຫາພຣະນາມຂອງພຣະເຈົ້າອີກຢູ່ບໍ? ເຈົ້າກ້າເວົ້າບໍວ່າ ພຣະເຈົ້າພຽງແຕ່ສາມາດຖືກເອີ້ນວ່າ ພຣະເຢໂຮວາ? ເຈົ້າກ້າເວົ້າບໍວ່າ ພຣະເຈົ້າພຽງແຕ່ສາມາດຖືກເອີ້ນວ່າ ພຣະເຢຊູ? ເຈົ້າກ້າແບກຮັບຄວາມຜິດບາບແຫ່ງການໝິ່ນປະໝາດພຣະເຈົ້າບໍ? ເຈົ້າຄວນຮູ້ວ່າ ໃນເບື້ອງຕົ້ນນັ້ນພຣະເຈົ້າບໍ່ໄດ້ມີຊື່. ພຣະອົງໃຊ້ໜຶ່ງ ຫຼື ສອງ ຫຼື ຫຼາຍຊື່ ກໍເພາະວ່າ ພຣະອົງມີພາລະກິດທີ່

ຕ້ອງປະຕິບັດ ແລະ ຕ້ອງຄຸ້ມຄອງມະນຸດຊາດ. ບໍ່ວ່າພຣະອົງຈະຖືກເອີ້ນຊື່ໃດກໍຕາມ, ພຣະອົງບໍ່ໄດ້ເລືອກຊື່ດັ່ງກ່າວນັ້ນຢ່າງອິດສະຫຼະດ້ວຍຕົວພຣະອົງເອງບໍ? ພຣະອົງຕ້ອງການໃຫ້ເຈົ້າ ຜູ້ທີ່ເປັນໜຶ່ງໃນການເນລະມິດສ້າງຂອງພຣະອົງ ມາຕັດສິນໃຈແທນພຣະອົງບໍ? ພຣະນາມທີ່ພຣະເຈົ້າຖືກເອີ້ນແມ່ນພຣະນາມທີ່ສອດຄ່ອງກັບສິ່ງທີ່ມະນຸດສາມາດເຂົ້າໃຈໄດ້ໂດຍພາສາຂອງມະນຸດ, ແຕ່ພຣະນາມນີ້ບໍ່ແມ່ນສິ່ງທີ່ມະນຸດສາມາດມີສ່ວນຮ່ວມໄດ້. ເຈົ້າສາມາດເວົ້າໄດ້ແຕ່ວ່າ ມີພຣະເຈົ້າຢູ່ໃນສະຫວັນ, ພຣະອົງຖືກເອີ້ນວ່າ ພຣະເຈົ້າ, ພຣະອົງເປັນພຣະເຈົ້າເອງເຊິ່ງມີລິດອຳນາດຍິ່ງໃຫຍ່ ຜູ້ເຊິ່ງມີສະຕິປັນຍາຫຼາຍ, ສູງສົ່ງຫຼາຍ, ອັດສະຈັນຫຼາຍ, ລຶກລັບຫຼາຍ ແລະ ມີລິດທານຸພາບສູງສຸດຫຼາຍ ແລະ ນອກຈາກສິ່ງນີ້ແລ້ວ ເຈົ້າກໍບໍ່ສາມາດເວົ້າຫຍັງໄດ້ອີກ; ນີ້ແມ່ນສິ່ງເລັກນ້ອຍທີ່ເຈົ້າສາມາດຮູ້ໄດ້. ເມື່ອເປັນແບບນີ້, ພຣະນາມຂອງພຣະເຢຊູສາມາດເປັນຕົວແທນໃຫ້ກັບພຣະເຈົ້າເອງໄດ້ບໍ? ເມື່ອຍຸກສຸດທ້າຍໄດ້ມາເຖິງ, ເຖິງແມ່ນວ່າ ຍັງເປັນພຣະເຈົ້າທີ່ປະຕິບັດພາລະກິດຂອງພຣະອົງ, ພຣະນາມຂອງພຣະອົງຕ້ອງປ່ຽນແປງນັ້ນກໍຍ້ອນວ່າ ມັນເປັນຍຸກທີ່ແຕກຕ່າງກັນ.

ໃນເມື່ອພຣະເຈົ້າເປັນຜູ້ຍິ່ງໃຫຍ່ທົ່ວທັງຈັກກະວານ ແລະ ໃນອານາຈັກເບື້ອງເທິງ, ແລ້ວພຣະອົງຈະອະທິບາຍທັງໝົດກ່ຽວກັບພຣະອົງເອງໂດຍໃຊ້ພາບຫຼັກຂອງເນື້ອໜັງເທົ່ານັ້ນບໍ? ພຣະເຈົ້າເຂົ້າສວມໃສ່ເນື້ອໜັງນີ້ເພື່ອປະຕິບັດພາລະກິດຂັ້ນຕອນໜຶ່ງຂອງພຣະອົງເທົ່ານັ້ນ. ບໍ່ມີຄວາມໝາຍໃດໆທີ່ສະເພາະຕໍ່ພາບລັກຂອງເນື້ອໜັງນີ້, ມັນບໍ່ມີສ່ວນກ່ຽວຂ້ອງກັບຍຸກທີ່ຜ່ານມາ ຫຼື ບໍ່ມີຫຍັງກ່ຽວພັນກັບອຸປະນິໄສຂອງພຣະເຈົ້າ. ເປັນຫຍັງພຣະເຢຊູຈຶ່ງບໍ່ຍອມໃຫ້ພາບຫຼັກຂອງພຣະອົງຍັງຄົງຢູ່? ເປັນຫຍັງພຣະອົງຈຶ່ງບໍ່ໃຫ້ມະນຸດແຕ້ມຮູບພາບຂອງພຣະອົງ ເພື່ອສິ່ງນັ້ນຈະຖ່າຍທອດໄປສູ່ລຸ້ນຕໍ່ໆໄປ? ເປັນຫຍັງພຣະອົງຈຶ່ງບໍ່ຍອມໃຫ້ຜູ້ຄົນຮັບຮູ້ວ່າ ພາບຫຼັກຂອງພຣະອົງເປັນພາບຫຼັກຂອງພຣະເຈົ້າ? ເຖິງແມ່ນລັກສະນະຂອງມະນຸດຖືກສ້າງໃນພາບຫຼັກຂອງພຣະເຈົ້າ, ມັນເປັນໄປໄດ້ບໍທີ່ຈະໃຫ້ຮູບຮ່າງຂອງມະນຸດເປັນຕົວແທນໃຫ້ກັບພາບຫຼັກອັນສູງສົ່ງຂອງພຣະເຈົ້າ? ເມື່ອພຣະເຈົ້າກາຍມາເປັນມະນຸດ, ພຣະອົງສະເດັດລົງຈາກສະຫວັນມາສູ່ເນື້ອໜັງສະເພາະໃດໜຶ່ງເທົ່ານັ້ນ. ເປັນພຣະວິນຍານຂອງພຣະອົງທີ່ລົງມາສູ່ເນື້ອໜັງ ເຊິ່ງວິທີທີ່ພຣະອົງປະຕິບັດພາລະກິດຂອງພຣະວິນຍານ. ເປັນພຣະວິນຍານທີ່ປາກົດຕົວໃນເນື້ອໜັງ ແລະ ເປັນພຣະວິນຍານທີ່ປະຕິບັດພາລະກິດຂອງພຣະອົງໃນເນື້ອໜັງ. ພາລະກິດທີ່ກະທຳໃນເນື້ອໜັງເປັນຕົວແທນຢ່າງສົມບູນໃຫ້ກັບພຣະວິນຍານ ແລະ ເນື້ອໜັງແມ່ນເພື່ອພາລະກິດ, ແຕ່ນັ້ນກໍບໍ່ໄດ້ໝາຍຄວາມວ່າ ພາບລັກສະນະຂອງເນື້ອໜັງເປັນຕົວແທນໃຫ້ກັບພາບຫຼັກອັນແທ້ຈິງຂອງພຣະເຈົ້າໄດ້; ນີ້ບໍ່ແມ່ນເປົ້າໝາຍ ຫຼື ຄວາມສຳຄັນຂອງພຣະເຈົ້າທີ່ກາຍມາເປັນມະນຸດ. ພຣະອົງກາຍມາເປັນມະນຸດເພື່ອວ່າພຣະວິນຍານຈະພົບສະຖານທີ່ເພື່ອອາໄສຢູ່ເຊິ່ງສອດຄ່ອງກັບການປະຕິບັດພາລະກິດຂອງພຣະອົງ, ຍິ່ງໄປກວ່ານັ້ນກໍເພື່ອບັນລຸພາລະກິດຂອງພຣະອົງໃນເນື້ອໜັງ, ເພື່ອວ່າຜູ້ຄົນຈະສາມາດເຫັນການກະທຳຂອງພຣະອົງ, ເຂົ້າໃຈອຸປະນິໄສຂອງພຣະອົງ, ໄດ້ຍິນພຣະທຳຂອງພຣະອົງ ແລະ ຮູ້ຄວາມອັດສະຈັນຂອງພາລະກິດຂອງພຣະອົງ. ພຣະນາມຂອງພຣະອົງເປັນຕົວແທນໃຫ້ກັບອຸປະນິໄສຂອງພຣະອົງ, ພາລະກິດຂອງພຣະອົງເປັນຕົວແທນໃຫ້ກັບຕົວຕົນຂອງພຣະອົງ, ແຕ່ພຣະອົງ

ບໍ່ເຄີຍເວົ້າຈັກເທື່ອວ່າ ຮູບຮ່າງຂອງພຣະອົງທີ່ຢູ່ໃນເນື້ອໜັງເປັນຕົວແທນໃຫ້ກັບພາບຫຼັກຂອງພຣະອົງ; ນັ້ນເປັນພຽງຄວາມຄິດຂອງມະນຸດ. ດ້ວຍເຫດນັ້ນ ລັກສະນະທີ່ສຳຄັນຂອງການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນພຣະນາມຂອງພຣະອົງ, ພາລະກິດຂອງພຣະອົງ, ອຸປະນິໄສຂອງພຣະອົງ ແລະ ເພດຂອງພຣະອົງ. ສິ່ງເຫຼົ່ານີ້ແມ່ນນຳໃຊ້ເພື່ອເປັນຕົວແທນໃຫ້ກັບການຄຸ້ມຄອງຂອງພຣະອົງໃນຍຸກນີ້. ການປາກົດຕົວໃນເນື້ອໜັງຂອງພຣະອົງບໍ່ມີສ່ວນກ່ຽວຂ້ອງຫຍັງກັບການຄຸ້ມຄອງຂອງພຣະອົງ, ເປັນພຽງແຕ່ເພື່ອເຫັນແກ່ພາລະກິດຂອງພຣະອົງໃນເວລານັ້ນ. ເຖິງຢ່າງໃດກໍຕາມ ມັນເປັນໄປບໍ່ໄດ້ສຳລັບພຣະເຈົ້າຜູ້ຊົງບັງເກີດເປັນມະນຸດທີ່ຈະບໍ່ມີຮູບຮ່າງໂດຍສະເພາະ, ດ້ວຍເຫດນັ້ນ ພຣະອົງຈຶ່ງເລືອກເອົາຄອບຄົວທີ່ເໝາະສົມເພື່ອກຳນົດເປັນຮູບຮ່າງຂອງພຣະອົງ. ຖ້າຮູບຮ່າງຂອງພຣະເຈົ້າມີຄວາມສຳຄັນໃນການເປັນຕົວແທນຂອງພຣະອົງ, ແລ້ວທຸກຄົນທີ່ມີພາບລັກສະນະໃບໜ້າທີ່ຄ້າຍຄືກັບພຣະອົງແມ່ນເປັນຕົວແທນໃຫ້ກັບພຣະເຈົ້າທັງໝົດ. ສິ່ງນັ້ນຈະບໍ່ແມ່ນຂໍ້ຜິດພາດທີ່ຮ້າຍແຮງທີ່ສຸດບໍ? ຮູບພາບຂອງພຣະເຢຊູແມ່ນຖືກແຕ້ມໂດຍມະນຸດເພື່ອວ່າ ມະນຸດຈະໄດ້ນະມັດສະການພຣະອົງ. ໃນເວລານັ້ນ, ພຣະວິນຍານບໍລິສຸດບໍ່ໄດ້ໃຫ້ຄຳສັ່ງທີ່ພິເສດໃດໆ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງສືບຕໍ່ໃຊ້ພາບວາດທີ່ຈິນຕະນາການຂຶ້ນມານັ້ນຈົນເຖິງປັດຈຸບັນ. ໃນຄວາມຈິງແລ້ວ, ອີງຕາມຄວາມຕັ້ງໃຈດັ່ງເດີມຂອງພຣະເຈົ້າ, ມະນຸດບໍ່ຄວນເຮັດແບບນີ້. ມັນເປັນພຽງຄວາມກະຕືລືລົ້ນຂອງມະນຸດເທົ່ານັ້ນທີ່ເຮັດໃຫ້ພາບວາດຂອງພຣະເຢຊູຍັງຄົງຢູ່ຈົນເຖິງປັດຈຸບັນ. ພຣະເຈົ້າເປັນພຣະວິນຍານ ແລະ ມະນຸດຈະບໍ່ສາມາດເຂົ້າໃຈວ່າ ພາບລັກສະນະຂອງພຣະອົງເປັນແບບໃດ. ອຸປະນິໄສຂອງພຣະອົງເທົ່ານັ້ນທີ່ສາມາດເປັນຕົວແທນພາບລັກສະນະຂອງພຣະອົງໄດ້. ສຳລັບຮູບຮ່າງດັງຂອງພຣະອົງ, ປາກຂອງພຣະອົງ, ຕາຂອງພຣະອົງ ແລະ ຜົມຂອງພຣະອົງແລ້ວ, ສິ່ງເຫຼົ່ານີ້ແມ່ນຢູ່ນອກເໜືອຄວາມສາມາດເຂົ້າໃຈຂອງເຈົ້າ. ເມື່ອການເປີດເຜີຍມາເຖິງໂຢຮັນ, ລາວໄດ້ເຫັນພາບລັກສະນະຂອງບຸດມະນຸດ ນັ້ນກໍຄື: ມີດາບສອງຄົມອອກຈາກປາກຂອງພຣະອົງ, ຕາຂອງພຣະອົງເປັນເໝືອນກັບແປວໄຟ, ຫົວ ແລະ ຜົມຂອງພຣະອົງເປັນສີຂາວເໝືອນກັບຂົນແກະ, ຕີນຂອງພຣະອົງເໝືອນກັບທອງແດງທີ່ຖືກຫຼອມ ແລະ ມີຜ້າບ່ຽງຄຳອ້ອມເອິກຂອງພຣະອົງ. ເຖິງແມ່ນຄຳເວົ້າຂອງລາວຈະແຈ່ມແຈ້ງທີ່ສຸດ, ພາບລັກສະນະຂອງພຣະເຈົ້າທີ່ລາວບັນລະຍາຍບໍ່ແມ່ນພາບລັກສະນະຂອງສິ່ງທີ່ຖືກສ້າງ. ສິ່ງທີ່ລາວເຫັນເປັນພຽງນິມິດ ແລະ ບໍ່ແມ່ນພາບລັກສະນະຂອງບຸກຄົນຈາກໂລກນີ້ເລີຍ. ໂຢຮັນໄດ້ເຫັນນິມິດ, ແຕ່ລາວບໍ່ໄດ້ເຫັນຮູບຮ່າງທີ່ແທ້ຈິງຂອງພຣະເຈົ້າ. ພາບລັກສະນະຂອງເນື້ອໜັງໃນການເປັນມະນຸດຂອງພຣະເຈົ້າເຊິ່ງເປັນພາບລັກສະນະຂອງສິ່ງທີ່ຖືກສ້າງ ແມ່ນບໍ່ສາມາດເປັນຕົວແທນໃຫ້ກັບອຸປະນິໄສຂອງພຣະເຈົ້າທັງໝົດໄດ້. ເມື່ອພຣະເຢໂຮວາສ້າງມະນຸດຊາດ, ພຣະອົງກ່າວວ່າ ພຣະອົງສ້າງໃນລັກສະນະຂອງພຣະອົງເອງ ແລະ ສ້າງຜູ້ຊາຍ ແລະ ຜູ້ຍິງ. ໃນເວລານັ້ນ, ພຣະອົງກ່າວວ່າ ພຣະອົງສ້າງຜູ້ຊາຍ ແລະ ຜູ້ຍິງໃນລັກສະນະຂອງພຣະອົງ. ເຖິງແມ່ນພາບລັກຂອງມະນຸດຄ້າຍຄືກັບພາບລັກຂອງພຣະເຈົ້າ, ສິ່ງນີ້ກໍບໍ່ສາມາດຕີຄວາມໝາຍໄດ້ວ່າ ຮູບຮ່າງຂອງມະນຸດແມ່ນພາບລັກຂອງພຣະເຈົ້າ. ເຈົ້າບໍ່ສາມາດໃຊ້ພາສາຂອງມະນຸດຊາດເພື່ອສະຫຼຸບພາບລັກຂອງພຣະເຈົ້າໄດ້ຢ່າງສົມບູນ ຍ້ອນພຣະເຈົ້າ

ສູງສົ່ງຫຼາຍ, ຍິ່ງໃຫຍ່ຫຼາຍ, ອັດສະຈັນຫຼາຍ ແລະ ບໍ່ສາມາດຢັ່ງເຖິງໄດ້!

ເມື່ອພຣະເຢຊູສະເດັດມາເພື່ອປະຕິບັດພາລະກິດຂອງພຣະອົງ, ມັນກໍຢູ່ພາຍໃຕ້ການຊົງນຳຂອງພຣະວິນຍານບໍລິສຸດ; ພຣະອົງກະທຳດັ່ງທີ່ພຣະວິນຍານບໍລິສຸດຕ້ອງການ ແລະ ບໍ່ໄດ້ອີງຕາມພຣະສັນຍາເດີມໃນຍຸກແຫ່ງພຣະບັນຍັດ ຫຼື ຕາມພາລະກິດຂອງພຣະເຢໂຮວາ. ເຖິງແມ່ນພາລະກິດທີ່ພຣະເຢຊູມາເພື່ອປະຕິບັດນັ້ນບໍ່ໄດ້ປະຕິບັດຕາມກົດລະບຽບຂອງພຣະເຢໂຮວາ ຫຼື ພຣະບັນຍັດຂອງພຣະເຢໂຮວາ, ແຫຼ່ງກຳເນີດຂອງພຣະອົງທັງສອງແມ່ນສິ່ງດຽວກັນ ແລະ ເໝືອນກັນ. ພາລະກິດທີ່ພຣະເຢຊູປະຕິບັດເປັນຕົວແທນໃຫ້ກັບພຣະນາມຂອງພຣະເຢຊູ ແລະ ມັນເປັນຕົວແທນໃຫ້ກັບຍຸກແຫ່ງພຣະຄຸນ; ສຳລັບພາລະກິດທີ່ພຣະເຢໂຮວາປະຕິບັດນັ້ນ ແມ່ນເປັນຕົວແທນໃຫ້ກັບພຣະເຢໂຮວາ ແລະ ມັນເປັນຕົວແທນໃຫ້ກັບຍຸກແຫ່ງພຣະບັນຍັດ. ພາລະກິດຂອງພຣະອົງທັງສອງແມ່ນພາລະກິດຂອງພຣະວິນຍານອົງດຽວໃນສອງຍຸກທີ່ແຕກຕ່າງກັນ. ພາລະກິດທີ່ພຣະເຢຊູປະຕິບັດພຽງແຕ່ສາມາດເປັນຕົວແທນໃຫ້ກັບຍຸກແຫ່ງພຣະຄຸນ ແລະ ພາລະກິດທີ່ພຣະເຢໂຮວາປະຕິບັດກໍພຽງແຕ່ສາມາດເປັນຕົວແທນໃຫ້ກັບພຣະສັນຍາເດີມໃນຍຸກແຫ່ງພຣະບັນຍັດ. ພຣະເຢໂຮວານຳພາປະຊາຊົນອິດສະຣາເອນ ແລະ ອີຢິບເທົ່ານັ້ນ ແລະ ທຸກຊົນຊາດທີ່ຢູ່ນອກອິດສະຣາເອນ. ພາລະກິດຂອງພຣະເຢຊູໃນພຣະສັນຍາໃໝ່ໃນຍຸກແຫ່ງພຣະຄຸນນັ້ນ ແມ່ນພາລະກິດຂອງພຣະເຈົ້າພາຍໃຕ້ພຣະນາມຂອງພຣະເຢຊູເພື່ອນຳພາຍຸກນັ້ນ. ຖ້າເຈົ້າເວົ້າວ່າ ພາລະກິດຂອງພຣະເຢຊູແມ່ນອີງຕາມພາລະກິດຂອງພຣະເຢໂຮວາ, ພຣະອົງບໍ່ໄດ້ລິເລີ່ມພາລະກິດໃໝ່ໃດເລີຍ ແລະ ທຸກສິ່ງທີ່ພຣະອົງກະທຳແມ່ນຕາມພຣະທຳຂອງພຣະເຢໂຮວາ, ຕາມພາລະກິດຂອງພຣະເຢໂຮວາ ແລະ ການທຳນາຍຂອງເອຊາຢາ, ຖ້າເປັນແບບນັ້ນແລ້ວ ພຣະເຢໂຮວາກໍຈະບໍ່ແມ່ນພຣະເຈົ້າທີ່ກາຍມາເປັນມະນຸດ. ຖ້າພຣະອົງປະຕິບັດພາລະກິດຂອງພຣະອົງໃນລັກສະນະນີ້, ພຣະອົງກໍຈະໄດ້ເປັນອັກຄະສາວົກ ຫຼື ເປັນພຽງຄົນງານໃນຍຸກແຫ່ງພຣະບັນຍັດ. ຖ້າມັນເປັນຄືກັບເຈົ້າເວົ້າ, ແລ້ວພຣະເຢຊູກໍຈະບໍ່ສາມາດລິເລີ່ມຍຸກໃໝ່ໄດ້ ຫຼື ພຣະອົງຈະບໍ່ສາມາດປະຕິບັດພາລະກິດໃດໆໄດ້ເລີຍ. ເຊັ່ນດຽວກັນ, ພຣະວິນຍານບໍລິສຸດກໍຕ້ອງໄດ້ປະຕິບັດພາລະກິດຂອງພຣະອົງຜ່ານທາງພຣະເຢໂຮວາເປັນຫຼັກ ແລະ ຖ້າຫາກບໍ່ໄດ້ປະຕິບັດຜ່ານທາງພຣະເຢໂຮວາ, ພຣະວິນຍານບໍລິສຸດກໍຈະບໍ່ສາມາດປະຕິບັດພາລະກິດໃໝ່ໄດ້ເລີຍ. ມະນຸດເຂົ້າໃຈພາລະກິດຂອງພຣະເຢຊູໃນລັກສະນະນີ້ແມ່ນເປັນການເຂົ້າໃຈຜິດ. ຖ້າມະນຸດເຊື່ອວ່າ ພາລະກິດທີ່ພຣະເຢຊູແມ່ນຖືກປະຕິບັດໂດຍອີງຕາມພຣະທຳຂອງພຣະເຢໂຮວາ ແລະ ອີງຕາມການທຳນາຍຂອງເອຊາຢາ, ແລ້ວພຣະເຢຊູເປັນພຣະເຈົ້າທີ່ບັງເກີດເປັນມະນຸດ ຫຼື ພຣະອົງເປັນພຽງຜູ້ປະກາດພຣະທຳ? ອີງຕາມມຸມມອງນີ້, ຈະບໍ່ມີຍຸກແຫ່ງພຣະຄຸນ ແລະ ພຣະເຢຊູກໍຈະບໍ່ແມ່ນການບັງເກີດເປັນມະນຸດຂອງພຣະເຈົ້າ, ຍ້ອນພາລະກິດທີ່ພຣະອົງປະຕິບັດບໍ່ສາມາດເປັນຕົວແທນໃຫ້ກັບຍຸກແຫ່ງພຣະຄຸນໄດ້ ແລະ ພຽງແຕ່ສາມາດເປັນຕົວແທນໃຫ້ກັບພຣະສັນຍາເດີມໃນຍຸກແຫ່ງພຣະບັນຍັດ. ສາມາດມີຍຸກໃໝ່ໄດ້ກໍຕໍ່ເມື່ອພຣະເຢຊູສະເດັດມາເພື່ອປະຕິບັດພາລະກິດໃໝ່, ເພື່ອເລີ່ມຕົ້ນຂັ້ນຕອນໃໝ່, ເພື່ອທຳລາຍພາລະກິດທີ່ໄດ້ກະທຳໃນອິດສະຣາເອນກ່ອນໜ້ານີ້ ແລະ ເພື່ອປະຕິບັດພາລະກິດຂອງພຣະອົງໂດຍບໍ່ໃຫ້ສອດຄ່ອງກັບພາລະກິດທີ່ພຣະເຢໂຮວາ

ໄດ້ກະທຳໃນອິດສະຣາເອນ ຫຼື ກັບກົດລະບຽບເກົ່າໆຂອງພຣະອົງ ຫຼື ສອດຄ່ອງກັບກົດລະບຽບຕ່າງໆ, ແຕ່ກົງກັນຂ້າມ ແມ່ນເພື່ອປະຕິບັດພາລະກິດໃໝ່ທີ່ພຣະອົງຄວນກະທຳ. ພຣະເຈົ້າເອງສະເດັດມາເພື່ອລິເລີ່ມຍຸກໃໝ່ ແລະ ພຣະເຈົ້າເອງສະເດັດມາເພື່ອນຳຍຸກດັ່ງກ່າວໄປສູ່ຈຸດສິ້ນສຸດ. ມະນຸດບໍ່ສາມາດປະຕິບັດພາລະກິດຂອງການເລີ່ມຕົ້ນຍຸກໃດໜຶ່ງ ແລະ ສິ້ນສຸດຍຸກດັ່ງກ່າວໄດ້. ຖ້າພຣະເຢຊູບໍ່ໄດ້ນຳພາລະກິດຂອງພຣະເຢໂຮວາມາສູ່ຈຸດສິ້ນສຸດຫຼັງຈາກທີ່ພຣະອົງສະເດັດມາ, ແລ້ວສິ່ງນັ້ນກໍຈະພິສູດໃຫ້ເຫັນວ່າ ພຣະອົງເປັນພຽງມະນຸດເທົ່ານັ້ນ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້. ແນ່ນອນຍ້ອນວ່າ ພຣະເຢຊູສະເດັດມາ ແລະ ໄດ້ສິ້ນສຸດພາລະກິດຂອງພຣະເຢໂຮວາ, ສືບຕໍ່ພາລະກິດຂອງພຣະເຢໂຮວາ ແລະ ຍິ່ງໄປກວ່ານັ້ນ ກໍໄດ້ປະຕິບັດພາລະກິດຂອງພຣະອົງເອງ ນັ້ນກໍຄື ພາລະກິດໃໝ່ຈຶ່ງພິສູດໄດ້ວ່ານີ້ແມ່ນຍຸກໃໝ່ ແລະ ພຣະເຢຊູກໍຄືພຣະເຈົ້າເອງ. ພຣະອົງທັງສອງປະຕິບັດສອງຂັ້ນຕອນພາລະກິດທີ່ແຕກຕ່າງກັນ. ຂັ້ນຕອນທຳອິດແມ່ນຖືກປະຕິບັດໃນພຣະວິຫານ ແລະ ອີກຂັ້ນຕອນແມ່ນຖືກປະຕິບັດນອກພຣະວິຫານ. ຂັ້ນຕອນໜຶ່ງແມ່ນການຊີ້ນຳຊີວິດຂອງມະນຸດຕາມກົດໝາຍ ແລະ ອີກຂັ້ນຕອນແມ່ນການຖວາຍເຄື່ອງບູຊາແທນຄວາມຜິດບາບ. ພາລະກິດສອງຂັ້ນຕອນເຫຼົ່ານີ້ແມ່ນແຕກຕ່າງກັນຢ່າງສິ້ນເຊີງ; ມັນເປັນການແບ່ງຍຸກໃໝ່ອອກຈາກຍຸກເກົ່າ ແລະ ມັນຖືກຕ້ອງທີ່ສຸດທີ່ຈະເວົ້າວ່າ ພວກມັນແມ່ນສອງຍຸກທີ່ແຕກຕ່າງກັນ. ສະຖານທີ່ຂອງພາລະກິດຂອງພຣະອົງທັງສອງກໍແຕກຕ່າງກັນ ແລະ ເນື້ອຫາຂອງພາລະກິດຂອງພຣະອົງທັງສອງກໍແຕກຕ່າງກັນ ແລະ ຈຸດປະສົງຂອງພາລະກິດຂອງພຣະອົງທັງສອງກໍແຕກຕ່າງກັນ. ເມື່ອເປັນແບບນັ້ນ ຈຶ່ງສາມາດແບ່ງອອກເປັນສອງຍຸກນັ້ນກໍຄື: ພຣະສັນຍາເດີມ ແລະ ໃໝ່ ເຊິ່ງໝາຍຄວາມວ່າ ຍຸກໃໝ່ ແລະ ເກົ່າ. ເມື່ອພຣະເຢຊູສະເດັດມາພຣະອົງບໍ່ໄດ້ເຂົ້າໄປໃນພຣະວິຫານ ເຊິ່ງພິສູດໄດ້ວ່າ ຍຸກຂອງພຣະເຢໂຮວາໄດ້ຈົບສິ້ນລົງແລ້ວ. ພຣະອົງບໍ່ໄດ້ເຂົ້າໄປໃນພຣະວິຫານ ກໍຍ້ອນວ່າ ພາລະກິດຂອງພຣະເຢໂຮວາທີ່ຢູ່ໃນພຣະວິຫານແມ່ນສຳເລັດລົງແລ້ວ ແລະ ບໍ່ຈຳເປັນຕ້ອງປະຕິບັດຄືນໃໝ່ອີກ ແລະ ຖ້າປະຕິບັດຄືນໃໝ່ ກໍຖືວ່າເປັນການເຮັດພາລະກິດນັ້ນຊ້ຳຄືນອີກຄັ້ງ. ການອອກຈາກພຣະວິຫານ, ການເລີ່ມຕົ້ນພາລະກິດໃໝ່ ແລະ ການລິເລີ່ມເສັ້ນທາງໃໝ່ທີ່ຢູ່ນອກພຣະວິຫານເທົ່ານັ້ນ ພຣະອົງຈຶ່ງສາມາດນຳພາລະກິດຂອງພຣະເຈົ້າໄປສູ່ຈຸດສູງສຸດ. ຖ້າພຣະອົງບໍ່ໄດ້ອອກຈາກພຣະວິຫານເພື່ອປະຕິບັດພາລະກິດຂອງພຣະອົງ, ພາລະກິດຂອງພຣະເຈົ້າກໍຈະຢຸດຢູ່ເທິງພື້ນຂອງພຣະວິຫານ ແລະ ຈະບໍ່ມີການປ່ຽນແປງໃໝ່ໃດໆ. ດ້ວຍເຫດນັ້ນເມື່ອພຣະເຢຊູມາ ພຣະອົງຈຶ່ງບໍ່ໄດ້ເຂົ້າສູ່ພຣະວິຫານ ແລະ ບໍ່ໄດ້ປະຕິບັດພາລະກິດຂອງພຣະອົງໃນພຣະວິຫານ. ພຣະອົງປະຕິບັດພາລະກິດຂອງພຣະອົງຢູ່ນອກພຣະວິຫານ, ນຳພາສາວົກຂອງພຣະອົງ ແລະ ປະຕິບັດພາລະກິດຂອງພຣະອົງຢ່າງເປີດເຜີຍ. ການທີ່ພຣະເຈົ້າອອກຈາກພຣະວິຫານເພື່ອປະຕິບັດພາລະກິດຂອງພຣະອົງໝາຍຄວາມວ່າ ພຣະເຈົ້າມີແຜນການໃໝ່. ພາລະກິດຂອງພຣະອົງແມ່ນຕ້ອງຖືກປະຕິບັດຢູ່ນອກພຣະວິຫານ ແລະ ມັນກໍເປັນພາລະກິດໃໝ່ທີ່ບໍ່ໄດ້ຖືກຈຳກັດຢູ່ໃນລັກສະນະຂອງການຈັດຕັ້ງປະຕິບັດຂອງພາລະກິດນັ້ນ. ທັນທີທີ່ພຣະເຢຊູສະເດັດມາເຖິງ, ພຣະອົງໄດ້ນຳພາລະກິດຂອງພຣະເຢໂຮວາ ເຊິ່ງຢູ່ໃນລະຫວ່າງຍຸກແຫ່ງພຣະສັນຍາເດີມນັ້ນໄປສູ່ຈຸດສິ້ນສຸດ. ເຖິງແມ່ນວ່າ

ພຣະອົງທັງສອງຖືກເອີ້ນໂດຍສອງພຣະນາມທີ່ແຕກຕ່າງກັນ, ມັນກໍເປັນພຣະວິນຍານອົງດຽວກັນທີ່ສຳເລັດພາລະກິດທັງສອງຂັ້ນຕອນ ແລະ ພາລະກິດກໍຖືກປະຕິບັດສືບຕໍ່ກັນຢ່າງຕໍ່ເນື່ອງ. ຍ້ອນວ່າພຣະນາມແຕກຕ່າງກັນ ແລະ ເນື້ອຫາຂອງພາລະກິດກໍແຕກຕ່າງກັນ, ຍຸກຈຶ່ງແຕກຕ່າງກັນ. ເມື່ອພຣະເຢໂຮວາສະເດັດມາ, ນັ້ນແມ່ນຍຸກຂອງພຣະເຢໂຮວາ ແລະ ເມື່ອພຣະເຢຊູສະເດັດມາ, ນັ້ນກໍແມ່ນຍຸກຂອງພຣະເຢຊູ. ດ້ວຍເຫດນັ້ນ ໃນການມາແຕ່ລະຄັ້ງ, ພຣະເຈົ້າຈຶ່ງຖືກເອີ້ນເປັນຊື່ດຽວ, ພຣະອົງເປັນຕົວແທນໃຫ້ກັບຍຸກດຽວ ແລະ ພຣະອົງລິເລີ່ມເສັ້ນທາງໃໝ່; ແລ້ວໃນເສັ້ນທາງໃໝ່ແຕ່ລະຢ່າງນັ້ນ ພຣະອົງນຳໃຊ້ຊື່ໃໝ່ ເຊິ່ງສະແດງວ່າ ພຣະເຈົ້າໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ ແລະ ພາລະກິດຂອງພຣະອົງບໍ່ເຄີຍຢຸດກ້າວໄປຂ້າງໜ້າຈັກເທື່ອ. ປະຫວັດສາດກ້າວໄປຂ້າງໜ້າຢູ່ສະເໝີ ແລະ ພາລະກິດຂອງພຣະເຈົ້າກໍກ້າວໄປຂ້າງໜ້າຢູ່ສະເໝີ. ເພື່ອໃຫ້ແຜນການຄຸ້ມຄອງຫົກພັນປີຂອງພຣະອົງຈົບສິ້ນລົງ, ມັນຕ້ອງສືບຕໍ່ກ້າວໄປຂ້າງໜ້າ. ໃນແຕ່ລະມື້ ພຣະອົງຕ້ອງປະຕິບັດພາລະກິດໃໝ່, ແຕ່ລະປີ ພຣະອົງຕ້ອງປະຕິບັດພາລະກິດໃໝ່; ພຣະອົງຕ້ອງລິເລີ່ມເສັ້ນທາງໃໝ່, ລິເລີ່ມຕົ້ນຍຸກໃໝ່, ເລີ່ມຕົ້ນພາລະກິດໃໝ່ ແລະ ຍິ່ງໃຫຍ່ກວ່າເດີມ ແລະ ພ້ອມດ້ວຍສິ່ງເຫຼົ່ານີ້ກໍຄືການນຳມາຂອງຊື່ໃໝ່ ແລະ ພາລະກິດໃໝ່. ຕະຫຼອດເວລາ, ພຣະວິນຍານຂອງພຣະເຈົ້າແມ່ນປະຕິບັດພາລະກິດໃໝ່, ບໍ່ເຄີຍຍຶດຕິດກັບວິທີທາງ ແລະ ກົດລະບຽບເດີມໆ. ພາລະກິດຂອງພຣະອົງບໍ່ເຄີຍຢຸດ ແຕ່ປະຕິບັດຢູ່ທຸກຊ່ວງເວລາ. ຖ້າເຈົ້າເວົ້າວ່າ ພາລະກິດຂອງພຣະວິນຍານບໍລິສຸດບໍ່ສາມາດປ່ຽນແປງໄດ້, ແລ້ວເປັນຫຍັງພຣະເຢໂຮວາຈຶ່ງຮຽກຮ້ອງໃຫ້ພວກປະໂລຫິດຮັບໃຊ້ພຣະອົງໃນພຣະວິຫານ ແຕ່ພຣະເຢຊູບໍ່ໄດ້ເຂົ້າໄປໃນພຣະວິຫານເລີຍ, ເຖິງແມ່ນວ່າ ເມື່ອພຣະອົງສະເດັດມາ, ຜູ້ຄົນຍັງໄດ້ເວົ້າວ່າ ພຣະອົງເປັນປະໂລຫິດຊັ້ນສູງ ແລະ ພຣະອົງມາຈາກຄົວເຮືອນຂອງເດວິດ ແລະ ຍັງເປັນປະໂລຫິດຊັ້ນສູງ ແລະ ເປັນກະສັດທີ່ຍິ່ງໃຫຍ່? ແລ້ວເປັນຫຍັງພຣະອົງຈຶ່ງບໍ່ຖວາຍເຄື່ອງບູຊາ? ການເຂົ້າໄປໃນພຣະວິຫານ ຫຼື ການບໍ່ເຂົ້າໄປໃນພຣະວິຫານ, ສິ່ງນີ້ບໍ່ແມ່ນພາລະກິດຂອງພຣະເຈົ້າເອງບໍ? ຕາມທີ່ມະນຸດຈິນຕະນາການ ຖ້າພຣະເຢຊູກັບມາອີກຄັ້ງ ແລະ ໃນຍຸກສຸດທ້າຍ ພຣະອົງຈະຍັງຖືກເອີ້ນວ່າ ພຣະເຢຊູ ແລະ ຍັງມາເທິງເມກສີຂາວ, ລົງມາທ່າມກາງມະນຸດໃນພາບລັກສະນະຂອງພຣະເຢຊູ: ແລ້ວນັ້ນຈະບໍ່ແມ່ນການເຮັດຊໍ້າພາລະກິດຂອງພຣະອົງບໍ? ພຣະວິນຍານບໍລິສຸດສາມາຍຶດຕິດກັບອະດີດບໍ? ທຸກສິ່ງທີ່ມະນຸດເຊື່ອແມ່ນແນວຄິດ ແລະ ທຸກສິ່ງທີ່ມະນຸດເຂົ້າໃຈແມ່ນຕາມຄວາມໝາຍຂອງຄຳເວົ້າໂດຍກົງ ແລະ ຕາມຈິນຕະນາການຂອງເຂົາເຊັ່ນກັນ; ພວກມັນບໍ່ສອດຄ່ອງກັບຫຼັກການຂອງພາລະກິດຂອງພຣະວິນຍານບໍລິສຸດ ແລະ ບໍ່ໄດ້ປະຕິບັດຕາມເຈດຕະນາຂອງພຣະເຈົ້າ. ພຣະເຈົ້າຈະບໍ່ປະຕິບັດພາລະກິດໃນລັກສະນະນັ້ນ; ພຣະເຈົ້າບໍ່ໄດ້ບ້າ ແລະ ໂງ່ຈ້າແບບນັ້ນ ແລະ ພາລະກິດຂອງພຣະອົງກໍບໍ່ໄດ້ງ່າຍດາຍຄືກັບທີ່ເຈົ້າຈິນຕະນາການ. ອີງຕາມທຸກສິ່ງທີ່ມະນຸດຈິນຕະນາການ, ພຣະເຢຊູຈະມາໂດຍຂີ່ກ້ອນເມກ ແລະ ສະເດັດມາທ່າມກາງພວກເຈົ້າ. ພວກເຈົ້າຈະເຫັນພຣະອົງ ຜູ້ທີ່ຈະບອກພວກເຈົ້າວ່າ ພຣະອົງເປັນພຣະເຈົ້າ ໂດຍຂີ່ເທິງກ້ອນເມກ. ພວກເຈົ້າຈະໄດ້ເຫັນຮອຍຕະປູໃນມືຂອງພຣະອົງເຊັ່ນກັນ ແລະ ຈະຮູ້ວ່າພຣະອົງເປັນພຣະເຢຊູ. ແລ້ວພຣະອົງຈະຊ່ວຍພວກເຈົ້າໃຫ້ລອດພົ້ນອີກຄັ້ງ ແລະ ຈະເປັນພຣະເຈົ້າທີ່ຍິ່ງໃຫຍ່ຂອງພວກເຈົ້າ.

ພຣະອົງຈະຊ່ວຍພວກເຈົ້າໃຫ້ລອດພົ້ນ, ປະທານຊື່ໃໝ່ໃຫ້ກັບພວກເຈົ້າ ແລະ ມອບກ້ອນຫີນສີຂາວໃຫ້ກັບພວກເຈົ້າແຕ່ລະຄົນ ຫຼັງຈາກທີ່ພວກເຈົ້າໄດ້ຮັບອະນຸຍາດໃຫ້ເຂົ້າສູ່ອານາຈັກສະຫວັນ ແລະ ຖືກຮັບເຂົ້າສູ່ສະຫວັນວິມານ. ຄວາມເຊື່ອດັ່ງກ່າວບໍ່ແມ່ນແນວຄິດຂອງມະນຸດບໍ? ພຣະເຈົ້າປະຕິບັດພາລະກິດຕາມແນວຄິດຂອງມະນຸດ ຫຼື ພຣະອົງປະຕິບັດພາລະກິດກົງກັນຂ້າມກັບແນວຄິດຂອງມະນຸດກັນແທ້? ແນວຄິດທັງໝົດຂອງມະນຸດບໍ່ໄດ້ມາຈາກຊາຕານບໍ? ມະນຸດທຸກຄົນບໍ່ໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມບໍ? ຖ້າພຣະເຈົ້າປະຕິບັດພາລະກິດຂອງພຣະອົງຕາມແນວຄິດຂອງມະນຸດ, ແລ້ວພຣະອົງຈະບໍ່ກາຍມາເປັນຊາຕານບໍ? ພຣະອົງຈະບໍ່ເປັນປະເພດດຽວກັນກັບການເນລະມິດສ້າງຂອງພຣະອົງບໍ? ຍ້ອນວ່າ ປັດຈຸບັນນີ້ ການເນລະມິດສ້າງຂອງພຣະອົງຖືກຊາຕານເຮັດໃຫ້ເສື່ອມຊາມຫຼາຍມະນຸດຈຶ່ງກາຍມາເປັນຮູບລັກຂອງຊາຕານ, ຖ້າພຣະເຈົ້າຕ້ອງປະຕິບັດພາລະກິດຕາມສິ່ງຕ່າງໆຂອງຊາຕານ, ແລ້ວພຣະອົງຈະບໍ່ຢູ່ຮ່ວມລີກດຽວກັນກັບຊາຕານບໍ? ມະນຸດຈະສາມາດຢັ່ງເຖິງພາລະກິດຂອງພຣະເຈົ້າໄດ້ແນວໃດ? ສະນັ້ນ ພຣະເຈົ້າຈະບໍ່ປະຕິບັດພາລະກິດຕາມແນວຄິດຂອງມະນຸດຈັກເທື່ອ, ພຣະອົງຈະບໍ່ປະຕິບັດພາລະກິດໃນລັກສະນະທີ່ເຈົ້າຈິນຕະນາການ. ມີຄົນທີ່ເວົ້າວ່າ ພຣະເຈົ້າເອງກ່າວວ່າ ພຣະອົງຈະມາເຖິງເທິງກ້ອນເມກ. ເປັນຄວາມຈິງທີ່ພຣະເຈົ້າກ່າວສິ່ງດັ່ງກ່າວດ້ວຍຕົວພຣະອົງເອງ, ແຕ່ເຈົ້າບໍ່ຮູ້ບໍວ່າ ບໍ່ມີມະນຸດຄົນໃດທີ່ສາມາດຢັ່ງເຖິງສິ່ງລຶກລັບຂອງພຣະເຈົ້າໄດ້? ເຈົ້າຮູ້ບໍວ່າບໍ່ມີມະນຸດຄົນໃດທີ່ສາມາດອະທິບາຍພຣະທຳຂອງພຣະເຈົ້າໄດ້? ເຈົ້າໝັ້ນໃຈໂດຍບໍ່ມີຄວາມສົງໄສແມ່ນແຕ່ໜ້ອຍດຽວບໍວ່າ ເຈົ້າໄດ້ຮັບການສ່ອງແສງສະຫວ່າງ ແລະ ການເຍືອງທາງໂດຍພຣະວິນຍານບໍລິສຸດ? ແນ່ໃຈບໍ່ວ່າ ພຣະວິນຍານບໍລິສຸດບໍ່ໄດ້ສະແດງໃຫ້ເຈົ້າເຫັນໃນສິ່ງນັ້ນໂດຍກົງ? ແມ່ນພຣະວິນຍານບໍລິສຸດບໍທີ່ແນະນຳເຈົ້າ ຫຼື ແນວຄິດຂອງເຈົ້າເອງທີ່ນຳພາເຈົ້າໃຫ້ຄິດແບບນັ້ນ? ເຈົ້າເວົ້າວ່າ "ສິ່ງນີ້ແມ່ນຖືກກ່າວໂດຍພຣະເຈົ້າເອງ". ແຕ່ພວກເຮົາບໍ່ສາມາດໃຊ້ແນວຄິດ ແລະ ຈິດໃຈຂອງພວກເຮົາເອງເພື່ອວັດແທກພຣະທຳຂອງພຣະເຈົ້າ. ສຳລັບຄຳເວົ້າທີ່ເອຊາຢາເວົ້າອອກມານັ້ນ, ເຈົ້າສາມາດອະທິບາຍຄຳເວົ້າຂອງລາວຢ່າງໝັ້ນໃຈທີ່ສຸດບໍ? ເຈົ້າກ້າທີ່ຈະອະທິບາຍຄຳເວົ້າຂອງລາວບໍ? ໃນເມື່ອເຈົ້າບໍ່ກ້າອະທິບາຍຄຳເວົ້າຂອງເອຊາຢາ, ແລ້ວເປັນຫຍັງເຈົ້າຈຶ່ງກ້າອະທິບາຍພຣະທຳຂອງພຣະເຢຊູ? ແມ່ນໃຜສູງສົ່ງກວ່າກັນ ພຣະເຢຊູ ຫຼື ເອຊາຢາ? ເມື່ອຄຳຕອບແມ່ນພຣະເຢຊູ, ເປັນຫຍັງເຈົ້າຈຶ່ງອະທິບາຍພຣະທຳທີ່ພຣະເຢຊູກ່າວໄວ້? ພຣະເຈົ້າໄດ້ບອກເຈົ້າກ່ຽວກັບພາລະກິດຂອງພຣະອົງໄວ້ລ່ວງໜ້າບໍ? ບໍ່ມີສິ່ງຊີວິດສ້າງແມ່ນແຕ່ສິ່ງດຽວທີ່ສາມາດຮູ້ໄດ້, ບໍ່ມີແມ່ນແຕ່ຜູ້ສົ່ງຂ່າວໃນສະຫວັນ ຫຼື ບຸດມະນຸດ, ແລ້ວເຈົ້າຈະຮູ້ໄດ້ແນວໃດ? ມະນຸດຂາດຕົກບົກຜ່ອງຫຼາຍ. ສິ່ງທີ່ສຳຄັນສຳລັບພວກເຈົ້າໃນຕອນນີ້ກໍຄື ການຮູ້ຈັກພາລະກິດສາມຂັ້ນຕອນ. ຈາກພາລະກິດຂອງພຣະເຢໂຮວາຈົນເຖິງພາລະກິດຂອງພຣະເຢຊູ ແລະ ຈາກພາລະກິດພຣະເຢຊູຈົນເຖິງຂັ້ນຕອນປັດຈຸບັນ, ສາມຂັ້ນຕອນເຫຼົ່ານີ້ສືບຕໍ່ປົກຄຸມທຸກຂອບເຂດແຫ່ງການຄຸ້ມຄອງຂອງພຣະເຈົ້າຢ່າງຕໍ່ເນື່ອງ ແລະ ພວກມັນທັງໝົດເປັນພາລະກິດຂອງພຣະວິນຍານອົງດຽວ. ນັບຕັ້ງແຕ່ການສ້າງໂລກ, ພຣະເຈົ້າໄດ້ປະຕິບັດພາລະກິດຄຸ້ມຄອງມະນຸດຊາດຢູ່ຕະຫຼອດເວລາ. ພຣະອົງເປັນການເລີ່ມຕົ້ນ ແລະ ການສິ້ນສຸດ. ພຣະອົງເປັນຜູ້ທຳອິດ

ແລະ ຜູ້ສຸດທ້າຍ. ພຣະອົງເປັນຜູ້ທີ່ເລີ່ມຕົ້ນຍຸກ ແລະ ເປັນຜູ້ທີ່ນຳຍຸກມາສູ່ການສິ້ນສຸດ. ພາລະກິດສາມຂັ້ນຕອນໃນຍຸກທີ່ແຕກຕ່າງກັນ ແລະ ໃນສະຖານທີ່ທີ່ແຕກຕ່າງກັນ ແມ່ນພາລະກິດຂອງພຣະວິນຍານອົງດຽວຢ່າງແນ່ນອນ. ທຸກຄົນທີ່ແບ່ງແຍກສາມຂັ້ນຕອນເຫຼົ່ານີ້ແມ່ນຢືນຢູ່ກົງກັນຂ້າມກັບພຣະເຈົ້າ. ບັດນີ້, ມັນຈຳເປັນສຳລັບເຈົ້າທີ່ຕ້ອງເຂົ້າໃຈວ່າພາລະກິດທັງໝົດຕັ້ງແຕ່ຂັ້ນຕອນທຳອິດຈົນເຖິງປັດຈຸບັນແມ່ນພາລະກິດຂອງພຣະເຈົ້າອົງດຽວ, ເປັນພາລະກິດຂອງພຣະວິນຍານອົງດຽວ. ເລື່ອງນີ້ບໍ່ຈຳເປັນຕ້ອງສົງໄສ.

# ກ່ຽວກັບພຣະຄຳພີ (1)

ຄວນມີການເຂົ້າຫາພຣະຄຳພີແນວໃດໃນຄວາມເຊື່ອໃນພຣະເຈົ້າ? ນີ້ຄືຄຳຖາມກ່ຽວກັບຫຼັກການ. ເປັນຫຍັງພວກເຮົາຈຶ່ງສົນທະນາກ່ຽວກັບຄຳຖາມນີ້? ເພາະວ່າໃນອະນາຄົດ ເຈົ້າຈະເຜີຍແຜ່ຂ່າວປະເສີດ ແລະ ຂະຫຍາຍພາລະກິດຂອງຍຸກແຫ່ງອານາຈັກ ແລະ ການມີພຽງແຕ່ສາມາດກ່າວເຖິງພາລະກິດຂອງພຣະເຈົ້າໃນປັດຈຸບັນແມ່ນບໍ່ພຽງພໍ. ເພື່ອຂະຫຍາຍພາລະກິດຂອງພຣະອົງ ມັນຍິ່ງສຳຄັນທີ່ເຈົ້າຈະສາມາດແກ້ໄຂແນວຄິດທາງສາສະໜາທີ່ເກົ່າແກ່ຂອງຜູ້ຄົນ ແລະ ວິທີຄວາມເຊື່ອທີ່ເກົ່າແກ່ ແລະ ປ່ອຍໃຫ້ພວກເຂົາເຊື່ອໝັ້ນແທ້ໆ ແລະ ເຂົ້າສູ່ປະເດັນທີ່ກ່ຽວພັນກັບພຣະຄຳພີ. ເປັນເວລາຫຼາຍປີ, ວິທີຄວາມເຊື່ອຕາມປະເພນີຂອງຜູ້ຄົນ (ຂອງສາສະໜາຄຣິດ ເຊິ່ງເປັນໜຶ່ງໃນສາມສາສະໜາຫຼັກຂອງໂລກ) ກໍຄືການອ່ານພຣະຄຳພີ; ການໜີຈາກພຣະຄຳພີບໍ່ແມ່ນຄວາມເຊື່ອໃນພຣະຜູ້ເປັນເຈົ້າ, ການໜີຈາກພຣະຄຳພີແມ່ນຄວາມຄິດນອກຄອກ ແລະ ຄວາມເຫັນນອກຮີດ ແລະ ແມ່ນແຕ່ໃນເວລາທີ່ຜູ້ຄົນອ່ານໜັງສືເຫຼັ້ມອື່ນໆ, ພື້ນຖານຂອງໜັງສືເຫຼົ່ານີ້ກໍຕ້ອງເປັນການອະທິບາຍກ່ຽວກັບພຣະຄຳພີ. ນັ້ນໝາຍຄວາມວ່າ ຖ້າເຈົ້າເຊື່ອໃນພຣະຜູ້ເປັນເຈົ້າ ແລ້ວເຈົ້າຕ້ອງອ່ານພຣະຄຳພີ ແລະ ນອກຈາກພຣະຄຳພີແລ້ວ ເຈົ້າຕ້ອງບໍ່ນະມັດສະການໜັງສືໃດທີ່ບໍ່ກ່ຽວຂ້ອງກັບພຣະຄຳພີ. ຖ້າເຈົ້າເຮັດແບບນັ້ນ ແລ້ວເຈົ້າກໍກຳລັງທໍລະຍົດຕໍ່ພຣະເຈົ້າ. ຕັ້ງແຕ່ເວລາທີ່ມີພຣະຄຳພີ, ຄວາມເຊື່ອໃນພຣະຜູ້ເປັນເຈົ້າຂອງຜູ້ຄົນແມ່ນຄວາມເຊື່ອໃນພຣະຄຳພີ. ແທນທີ່ຈະເວົ້າວ່າ ຜູ້ຄົນເຊື່ອໃນພຣະເຈົ້າ, ມັນດີກວ່າທີ່ຈະເວົ້າວ່າ ພວກເຂົາເຊື່ອໃນພຣະຄຳພີ; ແທນທີ່ຈະເວົ້າວ່າ ພວກເຂົາໄດ້ເລີ່ມອ່ານພຣະຄຳພີ, ມັນດີກວ່າທີ່ຈະເວົ້າວ່າ ພວກເຂົາໄດ້ເລີ່ມເຊື່ອໃນພຣະຄຳພີ; ແລະ ແທນທີ່ຈະເວົ້າວ່າ ພວກເຂົາໄດ້ກັບຄືນມາຢູ່ຕໍ່ໜ້າພຣະຜູ້ເປັນເຈົ້າ, ມັນດີກວ່າທີ່ຈະເວົ້າວ່າ ພວກເຂົາໄດ້ກັບຄືນມາຢູ່ຕໍ່ໜ້າພຣະຄຳພີ. ໃນລັກສະນະນີ້, ຜູ້ຄົນນະມັດສະການພຣະຄຳພີຄືກັບວ່າມັນເປັນພຣະເຈົ້າ, ຄືກັບວ່າມັນເປັນເລືອດເນື້ອແຫ່ງຊີວິດຂອງພວກເຂົາ ແລະ ການສູນເສຍມັນໄປກໍຈະເທົ່າກັບວ່າເປັນການສູນເສຍຊີວິດຂອງພວກເຂົາ. ຜູ້ຄົນເຫັນພຣະຄຳພີເປັນສິ່ງທີ່ສູງສົ່ງເທົ່າກັບພຣະເຈົ້າ ແລະ ຍິ່ງມີຄົນທີ່ເຫັນພຣະຄຳພີສູງສົ່ງກວ່າພຣະເຈົ້າອີກດ້ວຍ. ຖ້າຜູ້ຄົນປາສະຈາກພາລະກິດຂອງພຣະວິນຍານບໍລິສຸດ, ຖ້າພວກເຂົາບໍ່ສາມາດຮູ້ສຶກເຖິງພຣະເຈົ້າ, ພວກເຂົາກໍສາມາດສືບຕໍ່ດຳລົງຊີວິດໄດ້ ແຕ່ທັນທີທີ່ພວກເຂົາສູນເສຍພຣະຄຳພີ ຫຼື ສູນເສຍບົດ ແລະ ຂໍ້ຄວາມໂດດເດັ່ນໃນພຣະຄຳພີ ແລ້ວມັນກໍເທົ່າກັບວ່າພວກເຂົາໄດ້ສູນເສຍຊີວິດໄປ. ດ້ວຍເຫດນັ້ນ ທັນທີທີ່ຜູ້ຄົນເຊື່ອໃນພຣະຜູ້ເປັນເຈົ້າ ພວກເຂົາກໍເລີ່ມອ່ານພຣະຄຳພີ ແລະ ທ່ອງຂຶ້ນໃຈຂໍ້ພຣະຄຳພີ ແລະ ຍິ່ງພວກເຂົາສາມາດທ່ອງຂຶ້ນໃຈຂໍ້ພຣະຄຳພີໄດ້ຫຼາຍສໍ່າໃດ ສິ່ງນີ້ກໍຍິ່ງພິສູດວ່າ ພວກເຂົາຮັກພຣະຜູ້ເປັນເຈົ້າ ແລະ ມີຄວາມເຊື່ອທີ່ຍິ່ງໃຫຍ່ຫຼາຍສໍ່ານັ້ນ. ຄົນທີ່ໄດ້ອ່ານພຣະຄຳພີ ແລະ ສາມາດເວົ້າກ່ຽວກັບມັນໃຫ້ກັບຄົນອື່ນຟັງແມ່ນອ້າຍເອື້ອຍນ້ອງທີ່ດີທຸກຄົນ. ໃນເວລາຫຼາຍປີເຫຼົ່ານີ້, ຄວາມເຊື່ອຂອງຜູ້ຄົນ ແລະ ຄວາມຊື່ສັດຕໍ່ພຣະເຈົ້າແມ່ນຖືກວັດແທກຕາມຂອບເຂດຂອງຄວາມເຂົ້າໃຈພຣະຄຳພີຂອງພວກເຂົາ. ຄົນສ່ວນຫຼາຍບໍ່ເຂົ້າໃຈ

ເລີຍວ່າ ເປັນຫຍັງພວກເຂົາຈຶ່ງຄວນເຊື່ອໃນພຣະເຈົ້າ ຫຼື ຈະເຊື່ອໃນພຣະເຈົ້າແນວໃດ ແລະ ບໍ່ເຮັດຫຍັງເລີຍນອກຈາກຄົ້ນຫາຮ່ອງຮອຍຢ່າງຕາບອດເພື່ອຖອດຄວາມໝາຍໃນບົດພຣະຄຳພີ. ຜູ້ຄົນບໍ່ເຄີຍສະແຫວງຫາທິດທາງແຫ່ງພາລະກິດຂອງພຣະວິນຍານບໍລິສຸດຈັກເທື່ອ; ຕະຫຼອດຜ່ານມາ ພວກເຂົາບໍ່ໄດ້ເຮັດຫຍັງເລີຍນອກຈາກສຶກສາ ແລະ ຄົ້ນຫາຄວາມຈິງໃນພຣະຄຳພີຢ່າງເອົາເປັນເອົາຕາຍ ແລະ ບໍ່ມີໃຜໄດ້ພົບພາລະກິດທີ່ໃໝ່ກວ່າຂອງພຣະວິນຍານບໍລິສຸດ ເຊິ່ງຢູ່ນອກພຣະຄຳພີ. ບໍ່ມີໃຜເຄີຍໜີຈາກພຣະຄຳພີ ຫຼື ພວກເຂົາບໍ່ກ້າເຮັດແບບນັ້ນ. ຜູ້ຄົນໄດ້ສຶກສາພຣະຄຳພີເປັນເວລາຫຼາຍປີ, ພວກເຂົາໄດ້ສະເໜີຄຳອະທິບາຍຫຼາຍຢ່າງ ແລະ ໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍ; ພວກເຂົາຍັງມີຄວາມຄິດເຫັນທີ່ແຕກຕ່າງກັນກ່ຽວກັບພຣະຄຳພີ ເຊິ່ງພວກເຂົາໂຕ້ຖຽງກັນໂດຍບໍ່ສິ້ນສຸດ ຈົນເຖິງຂັ້ນທີ່ວ່າໄດ້ມີຫຼາຍກວ່າສອງພັນນິກາຍທີ່ແຕກຕ່າງກັນຖືກກໍ່ຕັ້ງຂຶ້ນໃນປັດຈຸບັນ. ພວກເຂົາທັງໝົດຕ້ອງການຄົ້ນພົບການອະທິບາຍທີ່ພິເສດບາງຢ່າງ ຫຼື ຄວາມລຶກລັບທີ່ເລິກເຊິ່ງໃນພຣະຄຳພີ, ພວກເຂົາຕ້ອງການຄົ້ນຫາມັນ ແລະ ຄົ້ນຫາເບື້ອງຫຼັງຂອງພາລະກິດຂອງພຣະເຢໂຮວາໃນອິດສະຣາເອນ ຫຼື ເບື້ອງຫຼັງຂອງພາລະກິດຂອງພຣະເຢຊູໃນຢູດາຍ ຫຼື ຄວາມລຶກລັບຫຼາຍກວ່ານັ້ນທີ່ບໍ່ມີໃຜຮູ້ຈັກເລີຍ. ການເຂົ້າຫາພຣະຄຳພີຂອງຜູ້ຄົນແມ່ນເປັນຄວາມຫຼົງໄຫຼ ແລະ ຄວາມເຊື່ອ ແລະ ບໍ່ມີໃຜສາມາດຊັດເຈນຢ່າງສົມບູນກ່ຽວກັບເລື່ອງລາວພາຍໃນ ຫຼື ແກ່ນແທ້ຂອງພຣະຄຳພີ. ດ້ວຍເຫດນັ້ນ ໃນປັດຈຸບັນ ຜູ້ຄົນຍັງມີຄວາມຮູ້ສຶກທີ່ບໍ່ສາມາດພັນລະນາໄດ້ເຖິງຄວາມມະຫັດສະຈັນ ເມື່ອເວົ້າເຖິງພຣະຄຳພີ ແລະ ພວກເຂົາຍັງຫຼົງໄຫຼມັນ ແລະ ມີຄວາມເຊື່ອມັນຫຼາຍຂຶ້ນ. ໃນປັດຈຸບັນ ທຸກຄົນຕ້ອງການຄົ້ນຫາຄຳທຳນາຍຂອງພາລະກິດແຫ່ງຍຸກສຸດທ້າຍໃນພຣະຄຳພີ, ພວກເຂົາຕ້ອງການຄົ້ນພົບວ່າ ມີພາລະກິດຫຍັງແດ່ທີ່ພຣະເຈົ້າກະທຳໃນລະຫວ່າງຍຸກສຸດທ້າຍ ແລະ ແມ່ນຫຍັງຄືໝາຍສຳຄັນສຳລັບຍຸກສຸດທ້າຍ. ດ້ວຍລັກສະນະນີ້ ການນະມັດສະການພຣະຄຳພີຂອງພວກເຂົາຍິ່ງກາຍມາເປັນການເອົາຈິງເອົາຈັງຂຶ້ນໄປອີກ ແລະ ຍິ່ງໃກ້ຮອດຍຸກສຸດທ້າຍຫຼາຍສໍ່າໃດ ພວກເຂົາຍິ່ງມີຄວາມເຊື່ອຖືຢ່າງຕາບອດໃນຄຳທຳນາຍຂອງພຣະຄຳພີຫຼາຍສໍ່ານັ້ນ ໂດຍສະເພາະສິ່ງທີ່ກ່ຽວກັບຍຸກສຸດທ້າຍ. ດ້ວຍຄວາມເຊື່ອຢ່າງຕາບອດແບບດັ່ງກ່າວໃນພຣະຄຳພີ, ດ້ວຍຄວາມໄວ້ວາງໃຈແບບດັ່ງກ່າວໃນພຣະຄຳພີ, ພວກເຂົາບໍ່ມີຄວາມປາຖະໜາທີ່ຈະສະແຫວງຫາພາລະກິດຂອງພຣະວິນຍານບໍລິສຸດເລີຍ. ໃນແນວຄິດຂອງຜູ້ຄົນພວກເຂົາຄິດວ່າ ມີພຽງແຕ່ພຣະຄຳພີເທົ່ານັ້ນທີ່ສາມາດນຳມາສູ່ພາລະກິດຂອງພຣະວິນຍານບໍລິສຸດໄດ້; ມີພຽງແຕ່ໃນພຣະຄຳພີເທົ່ານັ້ນທີ່ພວກເຂົາຈະຄົ້ນພົບຮອຍພຣະບາດຂອງພຣະເຈົ້າໄດ້; ມີພຽງແຕ່ໃນພຣະຄຳພີເທົ່ານັ້ນ ທີ່ມີຄວາມລຶກລັບແຫ່ງພາລະກິດຂອງພຣະເຈົ້າລີ້ລັບຢູ່; ມີພຽງພຣະຄຳພີເທົ່ານັ້ນບໍ່ມີໜັງສືເຫຼັ້ມອື່ນ ຫຼື ບຸກຄົນອື່ນ ທີ່ສາມາດອະທິບາຍທຸກສິ່ງກ່ຽວກັບພຣະເຈົ້າ ແລະ ພາລະກິດທັງໝົດຂອງພຣະອົງ; ພຣະຄຳພີສາມາດນຳພາລະກິດແຫ່ງສະຫວັນມາເທິງແຜ່ນດິນໂລກໄດ້; ແລະພຣະຄຳພີທັງສາມາດເລີ່ມຕົ້ນ ແລະ ສິ້ນສຸດຍຸກຕ່າງໆ. ດ້ວຍແນວຄິດເຫຼົ່ານີ້, ຜູ້ຄົນຈຶ່ງບໍ່ມີຄວາມປາຖະໜາທີ່ຈະຄົ້ນຫາພາລະກິດຂອງພຣະວິນຍານບໍລິສຸດ. ດ້ວຍເຫດນັ້ນ ບໍ່ວ່າ ພຣະຄຳພີຈະເປັນປະໂຫຍດໃຫ້ແກ່ຜູ້ຄົນທີ່ຢູ່ໃນອະດີດຫຼາຍສໍ່າໃດກໍຕາມ, ມັນໄດ້ກາຍມາເປັນອຸປະສັກຕໍ່ພາລະກິດຫຼ້າ

ສຸດຂອງພຣະອົງ. ຫາກປາສະຈາກພຣະຄຳພີ ຜູ້ຄົນສາມາດຊອກຫາຮອຍພຣະບາດຂອງພຣະເຈົ້າໃນບ່ອນອື່ນໄດ້, ແຕ່ໃນປັດຈຸບັນ ຮອຍພຣະບາດຂອງພຣະອົງແມ່ນມີແຕ່ໃນພຣະຄຳພີ ແລະ ການຂະຫຍາຍພາລະກິດຫຼ້າສຸດຂອງພຣະອົງຈຶ່ງກາຍມາເປັນສິ່ງທີ່ຫຍຸ້ງຍາກສອງເທົ່າ ແລະ ຍາກລຳບາກຈົນບໍ່ສາມາດແມ່ນແຕ່ຈະກ້າວຂາໄດ້. ທຸກຢ່າງເປັນແບບນີ້ກໍຍ້ອນບົດ ແລະ ຄຳເວົ້າເຊິ່ງເປັນທີ່ຮູ້ຈັກດີຈາກພຣະຄຳພີ ພ້ອມທັງຄຳທຳນາຍທີ່ຫຼາກຫຼາຍໃນພຣະຄຳພີ. ພຣະຄຳພີໄດ້ກາຍມາເປັນຮູບເຄົາລົບບູຊາໃນຄວາມຄິດຂອງມະນຸດ, ມັນໄດ້ກາຍເປັນປິດສະໜາໃນສະໝອງຂອງພວກເຂົາ ແລະ ພວກເຂົາບໍ່ສາມາດເຊື່ອເລີຍວ່າ ພຣະເຈົ້າສາມາດປະຕິບັດພາລະກິດທີ່ຢູ່ນອກພຣະຄຳພີ, ພວກເຂົາບໍ່ສາມາດເຊື່ອວ່າ ຜູ້ຄົນສາມາດຄົ້ນພົບພຣະເຈົ້າຢູ່ນອກພຣະຄຳພີ ແລ້ວແຮງໄກທີ່ພວກເຂົາຈະເຊື່ອວ່າ ພຣະເຈົ້າສາມາດແຍກອອກຈາກພຣະຄຳພີໃນລະຫວ່າງພາລະກິດສຸດທ້າຍ ແລະ ເລີ່ມຕົ້ນໃໝ່ໄດ້. ນີ້ເປັນສິ່ງທີ່ຜູ້ຄົນບໍ່ສາມາດຄິດເຖິງໄດ້; ພວກເຂົາບໍ່ສາມາດເຊື່ອມັນໄດ້ ແລະ ພວກເຂົາບໍ່ສາມາດຈິນຕະນາການກ່ຽວກັບມັນໄດ້. ພຣະຄຳພີໄດ້ກາຍມາເປັນອຸປະສັກທີ່ຍິ່ງໃຫຍ່ໃນການຍອມຮັບຂອງຜູ້ຄົນຕໍ່ພາລະກິດໃໝ່ຂອງພຣະເຈົ້າ ແລະ ເປັນຄວາມຫຍຸ້ງຍາກໃນການຂະຫຍາຍພາລະກິດໃໝ່ນີ້ຂອງພຣະອົງ. ສະນັ້ນ ຖ້າພວກເຈົ້າບໍ່ເຂົ້າໃຈເລື່ອງລາວພາຍໃນຂອງພຣະຄຳພີ, ພວກເຈົ້າຈະບໍ່ສາມາດເຜີຍແຜ່ຂ່າວປະເສີດຢ່າງປະສົບຜົນສຳເລັດ ຫຼື ພວກເຈົ້າຈະບໍ່ສາມາດເປັນພະຍານໃຫ້ກັບພາລະກິດໃໝ່ໄດ້. ໃນປັດຈຸບັນເຖິງພວກເຈົ້າບໍ່ອ່ານພຣະຄຳພີ, ພວກເຈົ້າກໍຍັງມີໄມຕີຈິດຕໍ່ພຣະຄຳພີຫຼາຍ ເຊິ່ງໝາຍຄວາມວ່າພຣະຄຳພີອາດຈະບໍ່ໄດ້ຢູ່ໃນມືຂອງເຈົ້າ ແຕ່ແນວຄິດຫຼາຍຢ່າງຂອງພວກເຈົ້າກໍມາຈາກພຣະຄຳພີ. ພວກເຈົ້າບໍ່ເຂົ້າໃຈຕົ້ນກຳເນີດຂອງພຣະຄຳພີ ຫຼື ເລື່ອງລາວພາຍໃນກ່ຽວກັບພາລະກິດສອງຂັ້ນຕອນທີ່ຜ່ານມາຂອງພຣະເຈົ້າ. ເຖິງພວກເຈົ້າບໍ່ໄດ້ອ່ານພຣະຄຳພີຢູ່ເລື້ອຍໆ, ພວກເຈົ້າກໍຕ້ອງເຂົ້າໃຈພຣະຄຳພີ, ພວກເຈົ້າຕ້ອງໄດ້ຮັບຄວາມຮູ້ກ່ຽວກັບພຣະຄຳພີຢ່າງຖືກຕ້ອງ ແລະ ດ້ວຍວິທີນີ້ເທົ່ານັ້ນ ພວກເຈົ້າຈຶ່ງຈະສາມາດຮູ້ຈັກແກ່ນແທ້ຂອງແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າ. ພວກເຈົ້າຈະໃຊ້ສິ່ງເຫຼົ່ານີ້ເພື່ອເອົາຊະນະຄົນ, ເພື່ອເຮັດໃຫ້ພວກເຂົາຮັບຮູ້ວ່າ ກະແສນີ້ແມ່ນຫົນທາງທີ່ແທ້ຈິງ, ເພື່ອເຮັດໃຫ້ພວກເຂົາຮັບຮູ້ວ່າ ເສັ້ນທາງທີ່ພວກເຈົ້າຍ່າງໃນປັດຈຸບັນແມ່ນເສັ້ນທາງແຫ່ງຄວາມຈິງ ເຊິ່ງນຳພາໂດຍພຣະວິນຍານບໍລິສຸດ ແລະ ມັນບໍ່ໄດ້ຖືກລິເລີ່ມໂດຍມະນຸດຄົນໃດເລີຍ.

ຫຼັງຈາກທີ່ພຣະເຈົ້າປະຕິບັດພາລະກິດຂອງຍຸກແຫ່ງພຣະບັນຍັດ, ພຣະສັນຍາເດີມຈຶ່ງກຳເນີດຂຶ້ນ ແລະ ຫຼັງຈາກນັ້ນ ຜູ້ຄົນກໍເລີ່ມອ່ານພຣະຄຳພີ. ຫຼັງຈາກທີ່ພຣະເຢຊູໄດ້ມາ, ພຣະອົງກໍປະຕິບັດພາລະກິດຂອງຍຸກແຫ່ງພຣະຄຸນ ແລະ ສາວົກຂອງພຣະອົງກໍຂຽນພຣະສັນຍາໃໝ່. ສະນັ້ນ ພຣະສັນຍາເດີມ ແລະໃໝ່ໃນພຣະຄຳພີຈຶ່ງກຳເນີດຂຶ້ນ ແລະ ແມ່ນແຕ່ຈົນເຖິງປັດຈຸບັນ ທຸກຄົນທີ່ເຊື່ອໃນພຣະເຈົ້າກໍໄດ້ອ່ານພຣະຄຳພີ. ພຣະຄຳພີເປັນໜັງສືປະຫວັດສາດ. ແນ່ນອນ ພຣະຄຳພີຍັງປະກອບມີຄຳທຳນາຍບາງຢ່າງຂອງຜູ້ປະກາດພຣະທຳ ແລະ ຄຳທຳນາຍດັ່ງກ່າວບໍ່ມີທາງເປັນປະຫວັດສາດໄດ້. ພຣະຄຳພີປະກອບມີຫຼາຍພາກສ່ວນ ບໍ່ໄດ້ມີພຽງແຕ່ຄຳທຳນາຍ ຫຼື ພາລະກິດຂອງພຣະເຢໂຮວາ ຫຼື ຈົດໝາຍຂອງໂປໂລເທົ່ານັ້ນ. ເຈົ້າຕ້ອງຮູ້ຈັກວ່າ ພຣະຄຳພີປະກອບມີຈັກພາກສ່ວນ; ພຣະສັນຍາເດີມປະກອບມີ

ປະຖົມມະການ, ອົບພະຍົບ... ແລະ ຍັງມີໜັງສືແຫ່ງຄຳທຳນາຍທີ່ຜູ້ປະກາດພຣະທຳໄດ້ຂຽນໄວ້. ໃນຕອນສຸດທ້າຍ, ພຣະສັນຍາເດີມສິ້ນສຸດລົງດ້ວຍໜັງສືມາລາກີ. ມັນບັນທຶກພາລະກິດຂອງຍຸກແຫ່ງພຣະບັນຍັດ ເຊິ່ງຖືກນຳພາໂດຍພຣະເຢໂຮວາ; ຈາກປະຖົມມະການຈົນເຖິງໜັງສືມາລາກີ, ມັນເປັນການບັນທຶກຢ່າງລະອຽດກ່ຽວກັບພາລະກິດທັງໝົດໃນຍຸກແຫ່ງພຣະບັນຍັດ. ນັ້ນໝາຍຄວາມວ່າ ພຣະສັນຍາເດີມບັນທຶກທຸກສິ່ງທີ່ຜູ້ຄົນ ເຊິ່ງຖືກນຳພາໂດຍພຣະເຢໂຮວາໃນຍຸກແຫ່ງພຣະບັນຍັດ ໄດ້ປະສົບ. ໃນລະຫວ່າງພຣະສັນຍາເດີມຂອງຍຸກແຫ່ງພຣະບັນຍັດ, ຜູ້ປະກາດພຣະທຳຈຳນວນຫຼາຍຄົນທີ່ຖືກແຕ່ງຕັ້ງໂດຍພຣະເຈົ້າເຢໂຮວາໄດ້ກ່າວຄຳທຳນາຍໃຫ້ກັບພຣະອົງ, ພວກເຂົາໃຫ້ຄຳສັ່ງສອນກັບຊົນເຜົ່າ ແລະ ຊົນຊາດຕ່າງໆ ແລະ ທຳນາຍພາລະກິດທີ່ພຣະເຢໂຮວາຈະກະທຳ. ຜູ້ຄົນທີ່ຖືກແຕ່ງຕັ້ງເຫຼົ່ານີ້ແມ່ນໄດ້ຮັບພຣະວິນຍານແຫ່ງຄຳທຳນາຍຈາກພຣະເຢໂຮວາ: ພວກເຂົາສາມາດເຫັນນິມິດຈາກພຣະເຢໂຮວາ ແລະ ໄດ້ຍິນສຽງຂອງພຣະອົງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງໄດ້ຮັບການດົນບັນດານຈາກພຣະອົງ ແລະ ຂຽນຄຳທຳນາຍ. ພາລະກິດທີ່ພວກເຂົາກະທຳເປັນການສຳແດງເຖິງສຽງຂອງພຣະເຢໂຮວາ, ການສະແດງເຖິງທຳນາຍຂອງພຣະເຢໂຮວາ ແລະ ພາລະກິດຂອງພຣະເຢໂຮວາໃນເວລານັ້ນກໍເປັນພຽງການນຳພາຜູ້ຄົນໂດຍໃຊ້ພຣະວິນຍານເທົ່ານັ້ນ; ພຣະອົງບໍ່ໄດ້ກາຍມາເປັນເນື້ອໜັງ ແລະ ຜູ້ຄົນກໍບໍ່ໄດ້ເຫັນໃບໜ້າຂອງພຣະອົງ. ດ້ວຍເຫດນັ້ນ ພຣະອົງຈຶ່ງແຕ່ງຕັ້ງຜູ້ປະກາດພຣະທຳຫຼາຍຄົນເພື່ອປະຕິບັດພາລະກິດຂອງພຣະອົງ ແລະ ມອບຄຳທຳນາຍທີ່ສັກສິດໃຫ້ກັບພວກເຂົາເພື່ອໃຫ້ພວກເຂົາສົ່ງຕໍ່ໄປສູ່ທຸກຊົນເຜົ່າຂອງອິດສະຣາເອນ. ພາລະກິດຂອງພວກເຂົາກໍຄືການກ່າວຄຳທຳນາຍ ແລະ ພວກເຂົາບາງຄົນກໍຂຽນຄຳສັ່ງສອນຂອງພຣະເຢໂຮວາທີ່ມີໃຫ້ພວກເຂົານັ້ນລົງເພື່ອສະແດງໃຫ້ຄົນອື່ນເຫັນ. ພຣະເຢໂຮວາແຕ່ງຕັ້ງຜູ້ຄົນເຫຼົ່ານີ້ຂຶ້ນມາເພື່ອກ່າວຄຳທຳນາຍ, ເພື່ອທຳນາຍເຖິງພາລະກິດໃນອະນາຄົດ ຫຼື ພາລະກິດທີ່ຍັງຕ້ອງກະທຳໃຫ້ສຳເລັດໃນເວລານັ້ນ ເພື່ອຜູ້ຄົນຈະສາມາດເຫັນຄວາມອັດສະຈັນ ແລະ ສະຕິປັນຍາຂອງພຣະເຢໂຮວາ. ໜັງສືແຫ່ງການທຳນາຍເຫຼົ່ານີ້ແຕກຕ່າງຈາກໜັງສືເຫຼັ້ມອື່ນໆໃນພຣະຄຳພີພີສົມຄວນ; ພວກມັນແມ່ນພຣະທຳທີ່ມີການກ່າວ ຫຼື ຂຽນລົງໂດຍຄົນທີ່ໄດ້ຮັບພຣະວິນຍານແຫ່ງການທຳນາຍ, ໂດຍຄົນທີ່ໄດ້ຮັບນິມິດ ຫຼື ສຽງຈາກພຣະເຢໂຮວາ. ນອກຈາກໜັງສືແຫ່ງການທຳນາຍແລ້ວ, ທຸກສິ່ງທີ່ຢູ່ໃນພຣະສັນຍາເດີມແມ່ນສ້າງຂຶ້ນຈາກການບັນທຶກຂອງຜູ້ຄົນ ຫຼັງຈາກທີ່ພຣະເຢໂຮວາໄດ້ສຳເລັດພາລະກິດຂອງພຣະອົງ. ໜັງສືເຫຼົ່ານີ້ບໍ່ສາມາດແທນຄຳທຳນາຍທີ່ກ່າວໄວ້ໂດຍຜູ້ປະກາດພຣະທຳທີ່ພຣະເຢໂຮວາແຕ່ງຕັ້ງຂຶ້ນມາ, ເໝືອນກັບທີ່ປະຖົມມະການ ແລະ ອົບພະຍົບບໍ່ສາມາດປຽບທຽບກັບໜັງສືເອຊາຢາ ແລະ ໜັງສືດານິເອນໄດ້. ຄຳທຳນາຍໄດ້ຖືກກ່າວໄວ້ກ່ອນທີ່ພາລະກິດຈະໄດ້ຮັບການປະຕິບັດ; ໃນຂະນະດຽວກັນ ໜັງສືເຫຼັ້ມອື່ນໆຖືກຂຽນຂຶ້ນຫຼັງຈາກພາລະກິດໄດ້ສຳເລັດລົງແລ້ວ ເຊິ່ງເປັນສິ່ງທີ່ຜູ້ຄົນສາມາດເຮັດໄດ້. ຜູ້ປະກາດພຣະທຳໃນເວລານັ້ນໄດ້ຮັບການດົນບັນດານຈາກພຣະເຢໂຮວາ ແລະ ກ່າວຄຳທຳນາຍບາງຢ່າງ, ພວກເຂົາກ່າວພຣະທຳຫຼາຍຂໍ້ ແລະ ພວກເຂົາທຳນາຍສິ່ງຕ່າງໆໃນຍຸກແຫ່ງພຣະຄຸນ ພ້ອມທັງການທຳລາຍໂລກໃນຍຸກສຸດທ້າຍນັ້ນກໍຄືພາລະກິດທີ່ພຣະເຢໂຮວາວາງແຜນທີ່ຈະປະຕິບັດ. ໜັງສືທີ່ເຫຼືອທັງໝົດບັນທຶກພາລະກິດທີ່

ພຣະເຢໂຮວາໄດ້ກະທຳໃນອິດສະຣາເອນ. ສະນັ້ນ ເມື່ອເຈົ້າອ່ານພຣະຄຳພີ, ຫຼັກໆແມ່ນເຈົ້າກຳລັງອ່ານກ່ຽວກັບສິ່ງທີ່ພຣະເຢໂຮວາກະທຳໃນອິດສະຣາເອນ; ພຣະສັນຍາເດີມໃນພຣະຄຳພີ ຫຼັກໆ ແມ່ນບັນທຶກພາລະກິດຂອງພຣະເຢໂຮວາໃນການນຳພາອິດສະຣາເອນ, ການທີ່ພຣະອົງໃຊ້ໂມເຊເພື່ອນຳພາຊາວອິດສະຣາເອນອອກຈາກອີຢິບ ຜູ້ເຊິ່ງປົດປ່ອຍພວກເຂົາອອກຈາກໂສ້ຂອງພວກຟາໂຣ ແລະ ນຳພວກເຂົາໄປສູ່ບ່ອນທຸລະກັນດານ ຫຼັງຈາກນັ້ນ ພວກເຂົາກໍເຂົ້າສູ່ການາອານ ແລະ ທຸກສິ່ງທີ່ເກີດຂຶ້ນຫຼັງຈາກນີ້ກໍເປັນຊີວິດຂອງພວກເຂົາໃນການາອານ. ທຸກສິ່ງນີ້ແມ່ນຖືກສ້າງຂຶ້ນຈາກການບັນທຶກກ່ຽວກັບພາລະກິດຂອງພຣະເຢໂຮວາທີ່ປະຕິບັດທົ່ວອິດສະຣາເອນ. ທຸກສິ່ງທີ່ບັນທຶກໃນພຣະສັນຍາເດີມແມ່ນພາລະກິດຂອງພຣະເຢໂຮວາໃນອິດສະຣາເອນ, ມັນເປັນພາລະກິດທີ່ພຣະເຢໂຮວາກະທຳໃນດິນແດນທີ່ພຣະອົງຊົງສ້າງອາດາມ ແລະ ເອວາ. ຕັ້ງແຕ່ພຣະເຈົ້າເລີ່ມຕົ້ນນຳພາຜູ້ຄົນເທິງແຜ່ນດິນໂລກຈົນເຖິງຍຸກສະໄໝໂນອາ, ທຸກສິ່ງທີ່ຖືກບັນທຶກໄວ້ໃນພຣະສັນຍາເດີມນັ້ນ ແມ່ນພາລະກິດກ່ຽວຂ້ອງກັບອິດສະຣາເອນ. ແລ້ວເປັນຫຍັງຈຶ່ງບໍ່ມີການບັນທຶກກ່ຽວກັບພາລະກິດໃດເລີຍທີ່ຢູ່ນອກເໜືອອິດສະຣາເອນ? ເພາະວ່າດິນແດນອິດສະຣາເອນແມ່ນບ່ອນກຳເນີດຂອງມະນຸດຊາດ. ໃນຕອນເລີ່ມຕົ້ນ, ແມ່ນບໍ່ມີປະເທດອື່ນໃດ ນອກຈາກອິດສະຣາເອນ ແລະ ພຣະເຢໂຮວາກໍບໍ່ໄດ້ປະຕິບັດພາລະກິດໃນສະຖານທີ່ແຫ່ງອື່ນໆເລີຍ. ດ້ວຍເຫດນີ້, ສິ່ງທີ່ບັນທຶກໃນພຣະສັນຍາເດີມຂອງພຣະຄຳພີແມ່ນເປັນພຽງພາລະກິດຂອງພຣະເຈົ້າໃນອິດສະຣາເອນໃນເວລານັ້ນເທົ່ານັ້ນ. ພຣະທຳທີ່ກ່າວໄວ້ໂດຍຜູ້ປະກາດພຣະທຳ ເຊັ່ນ: ເອຊາຢາ, ດານີເອນ, ເຢເຣມີຢາ ແລະ ເອເຊກີເອນ... ພຣະທຳຂອງພວກເຂົາທຳນາຍພາລະກິດອື່ນໆຂອງພຣະອົງເທິງແຜ່ນດິນໂລກ, ພຣະທຳເຫຼົ່ານັ້ນທຳນາຍເຖິງພາລະກິດຂອງພຣະເຢໂຮວາເອງ. ທຸກສິ່ງນີ້ແມ່ນມາຈາກພຣະເຈົ້າ, ມັນແມ່ນພາລະກິດຂອງພຣະວິນຍານບໍລິສຸດ ແລະ ນອກຈາກໜັງສືເຫຼົ່ານີ້ທີ່ມາຈາກຜູ້ປະກາດພຣະທຳແລ້ວ, ທຸກສິ່ງແມ່ນການບັນທຶກປະສົບການຂອງຜູ້ຄົນກ່ຽວກັບພາລະກິດຂອງພຣະເຢໂຮວາໃນເວລານັ້ນ.

ພາລະກິດແຫ່ງການຊົງສ້າງເກີດຂຶ້ນກ່ອນຈະມີມະນຸດຊາດ ແຕ່ໜັງສືປະຖົມມະການພຽງແຕ່ເກີດຂຶ້ນຫຼັງຈາກມີມະນຸດຊາດ; ມັນເປັນໜັງສືທີ່ຂຽນຂຶ້ນໂດຍໂມເຊໃນລະຫວ່າງຍຸກແຫ່ງພຣະບັນຍັດ. ມັນເປັນຄືກັບສິ່ງທີ່ເກີດຂຶ້ນທ່າມກາງພວກເຈົ້າໃນປັດຈຸບັນ ນັ້ນກໍຄື: ຫຼັງຈາກມີເຫດການເກີດຂຶ້ນ, ພວກເຈົ້າກໍຂຽນເຫດການນັ້ນລົງເພື່ອສະແດງໃຫ້ກັບຜູ້ຄົນທີ່ຢູ່ໃນອະນາຄົດເຫັນ ແລະ ສຳລັບຜູ້ຄົນທີ່ຢູ່ໃນອະນາຄົດ, ສິ່ງທີ່ພວກເຈົ້າໄດ້ບັນທຶກໄວ້ນັ້ນ ກໍຄືສິ່ງທີ່ເກີດຂຶ້ນໃນອະດີດ, ສິ່ງເຫຼົ່ານັ້ນບໍ່ແມ່ນຫຍັງເໜືອໄປກວ່າປະຫວັດສາດ. ສິ່ງທີ່ບັນທຶກໄວ້ໃນພຣະສັນຍາເດີມແມ່ນພາລະກິດຂອງພຣະເຢໂຮວາໃນອິດສະຣາເອນ ແລະ ສິ່ງທີ່ບັນທຶກໄວ້ໃນພຣະສັນຍາໃໝ່ແມ່ນພາລະກິດຂອງພຣະເຢຊູໃນລະຫວ່າງຍຸກແຫ່ງພຣະຄຸນ; ພວກເຂົາບັນທຶກພາລະກິດທີ່ພຣະເຈົ້າກະທຳໃນສອງຍຸກທີ່ແຕກຕ່າງກັນ. ພຣະສັນຍາເດີມບັນທຶກພາລະກິດຂອງພຣະເຈົ້າໃນລະຫວ່າງຍຸກແຫ່ງພຣະບັນຍັດ ແລະ ດ້ວຍເຫດນັ້ນ ພຣະສັນຍາເດີມຈຶ່ງເປັນໜັງສືປະຫວັດສາດ, ໃນຂະນະທີ່ພຣະສັນຍາໃໝ່ແມ່ນຜົນຂອງພາລະກິດໃນຍຸກແຫ່ງພຣະຄຸນ. ເມື່ອພາລະກິດໃໝ່ເລີ່ມຕົ້ນຂຶ້ນ, ພຣະສັນຍາໃໝ່ກໍກາຍເປັນສິ່ງທີ່ຫຼ້າສະໄໝ ແລະ ດ້ວຍ

ເຫດນັ້ນ ພຣະສັນຍາໃໝ່ຈຶ່ງເປັນໜັງສືປະຫວັດສາດເຊັ່ນດຽວກັນ. ແນ່ນອນ, ພຣະສັນຍາໃໝ່ບໍ່ໄດ້ຈັດເປັນລະບົບຄືກັບພຣະສັນຍາເດີມ ຫຼື ບໍ່ໄດ້ມີການບັນທຶກຫຼາຍສິ່ງຫຼາຍຢ່າງຄືກັບພຣະສັນຍາເດີມ. ພຣະທຳທັງໝົດທີ່ກ່າວໄວ້ໂດຍພຣະເຢໂຮວາແມ່ນຖືກບັນທຶກໃນພຣະສັນຍາເດີມຂອງພຣະຄຳພີ, ໃນຂະນະດຽວກັນມີພຽງແຕ່ພຣະທຳບາງຂໍ້ຂອງພຣະເຢຊູເທົ່ານັ້ນທີ່ຖືກບັນທຶກໃນພຣະກິດຕິຄຸນທັງສີ່. ແນ່ນອນ, ພຣະເຢຊູໄດ້ປະຕິບັດພາລະກິດຫຼາຍຢ່າງເຊັ່ນກັນ ແຕ່ມັນບໍ່ໄດ້ຖືກບັນທຶກໄວ້ເປັນລາຍລະອຽດ. ມີການບັນທຶກໜ້ອຍກວ່າໃນພຣະສັນຍາໃໝ່ ເພາະຈຳນວນພາລະກິດທີ່ພຣະເຢຊູປະຕິບັດ; ຈຳນວນພາລະກິດທີ່ພຣະອົງປະຕິບັດໃນລະຫວ່າງສາມປີເຄິ່ງເທິງແຜ່ນດິນໂລກ ແລະ ພາລະກິດຂອງພວກອັກຄະສາວົກແມ່ນໜ້ອຍກວ່າພາລະກິດຂອງພຣະເຢໂຮວາຫຼາຍ. ແລ້ວດ້ວຍເຫດນັ້ນ, ໜັງສືໃນພຣະສັນຍາໃໝ່ຈຶ່ງມີໜ້ອຍກວ່າພຣະສັນຍາເດີມ.

ພຣະຄຳພີເປັນໜັງສືປະເພດໃດ? ພຣະສັນຍາເດີມແມ່ນພາລະກິດຂອງພຣະເຈົ້າໃນລະຫວ່າງຍຸກແຫ່ງພຣະບັນຍັດ. ພຣະສັນຍາເດີມໃນພຣະຄຳພີບັນທຶກພາລະກິດທັງໝົດຂອງພຣະເຢໂຮວາໃນລະຫວ່າງຍຸກແຫ່ງພຣະບັນຍັດ ແລະ ພາລະກິດແຫ່ງການຊົງສ້າງຂອງພຣະອົງ. ພຣະສັນຍາເດີມທັງໝົດບັນທຶກພາລະກິດທີ່ພຣະເຢໂຮວາກະທຳ ແລະ ສິ້ນສຸດການບັນທຶກກ່ຽວກັບພາລະກິດຂອງພຣະເຢໂຮວາດ້ວຍໜັງສືມາລາກີ. ພຣະສັນຍາເດີມບັນທຶກພາລະກິດສອງສ່ວນທີ່ກະທຳໂດຍພຣະເຈົ້າ: ສ່ວນທີໜຶ່ງແມ່ນພາລະກິດແຫ່ງການຊົງສ້າງ ແລະ ອີກສ່ວນໜຶ່ງແມ່ນການອອກພຣະບັນຍັດ. ທັງສອງເປັນພາລະກິດທີ່ພຣະເຢໂຮວາກະທຳ. ຍຸກແຫ່ງພຣະບັນຍັດສະແດງເຖິງພາລະກິດພາຍໃຕ້ພຣະນາມຂອງພຣະເຈົ້າເຢໂຮວາ; ເປັນພາລະກິດທັງໝົດທີ່ຖືກປະຕິບັດພາຍໃຕ້ພຣະນາມຂອງພຣະເຢໂຮວາເປັນຫຼັກ. ສະນັ້ນ, ພຣະສັນຍາເດີມຈຶ່ງບັນທຶກພາລະກິດຂອງພຣະເຢໂຮວາ ແລະ ພຣະສັນຍາໃໝ່ບັນທຶກພາລະກິດຂອງພຣະເຢຊູ ເຊິ່ງເປັນພາລະກິດທີ່ປະຕິບັດພາຍໃຕ້ພຣະນາມຂອງພຣະເຢຊູເປັນຫຼັກ. ຄວາມສຳຄັນຂອງພຣະນາມຂອງພຣະເຢຊູ ແລະ ພາລະກິດທີ່ພຣະອົງກະທຳແມ່ນຖືກບັນທຶກໄວ້ໃນພຣະສັນຍາໃໝ່ເປັນສ່ວນຫຼາຍ. ໃນລະຫວ່າງຍຸກແຫ່ງພຣະບັນຍັດໃນພຣະສັນຍາເດີມ, ພຣະເຢໂຮວາສ້າງພຣະວິຫານ ແລະ ແທ່ນບູຊາໃນອິດສະຣາເອນ, ພຣະອົງນຳພາຊີວິດຂອງຊາວອິດສະຣາເອນເທິງແຜ່ນດິນໂລກ, ເຊິ່ງພິສູດໃຫ້ເຫັນວ່າ ພວກເຂົາເປັນຜູ້ຄົນທີ່ຖືກເລືອກຂອງພຣະອົງ, ເປັນກຸ່ມຄົນທຳອິດທີ່ພຣະອົງເລືອກເທິງແຜ່ນດິນໂລກ ແລະ ເປັນຜູ້ຄົນທີ່ພຣະອົງເພິ່ງພໍໃຈທີ່ສຸດ ແລະ ເປັນກຸ່ມຄົນທຳອິດທີ່ພຣະອົງນຳພາດ້ວຍຕົວພຣະອົງເອງ. ທັງສິບສອງຊົນເຜົ່າຂອງອິດສະຣາເອນເປັນຜູ້ຄົນທຳອິດທີ່ພຣະເຢໂຮວາໄດ້ເລືອກໄວ້ແລ້ວ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງປະຕິບັດພາລະກິດໃນພວກເຂົາຢູ່ສະເໝີຈົນເຖິງເວລາທີ່ພາລະກິດຂອງພຣະເຢໂຮວາໃນຍຸກແຫ່ງພຣະບັນຍັດສິ້ນສຸດລົງ. ຂັ້ນຕອນທີສອງຂອງພາລະກິດ ແມ່ນພາລະກິດໃນຍຸກແຫ່ງພຣະຄຸນໃນພຣະສັນຍາໃໝ່ ແລະ ໄດ້ຖືກປະຕິບັດທ່າມກາງຊາວຢິວ ແລະ ໃນທ່າມກາງໜຶ່ງໃນສິບສອງຊົນເຜົ່າຂອງອິດສະຣາເອນ. ຂອບເຂດຂອງພາລະກິດນີ້ແມ່ນໜ້ອຍກວ່າ ເພາະພຣະເຢຊູເປັນພຣະເຈົ້າທີ່ລົງມາບັງເກີດເປັນເນື້ອໜັງ. ພຣະເຢຊູປະຕິບັດພາລະກິດພຽງແຕ່ໃນດິນແດນຢູດາ ແລະ ພຽງແຕ່ປະຕິບັດພາລະກິດໃນເວລາສາມປີເຄິ່ງ

ເທົ່ານັ້ນ; ດ້ວຍເຫດນັ້ນ ສິ່ງທີ່ຖືກບັນທຶກໃນພຣະສັນຍາໃໝ່ແມ່ນບໍ່ສາມາດເກີນຈຳນວນພາລະກິດທີ່ຖືກບັນທຶກໃນພຣະສັນຍາເດີມໄດ້. ພາລະກິດຂອງພຣະເຢຊູໃນຍຸກແຫ່ງພຣະຄຸນແມ່ນຖືກບັນທຶກໃນພຣະກິດຕິຄຸນທັງສີ່ເປັນຫຼັກ. ເສັ້ນທາງທີ່ຜູ້ຄົນໃນຍຸກແຫ່ງພຣະຄຸນເດີນແມ່ນເປັນການປ່ຽນແປງຢ່າງເລັກນ້ອຍທີ່ສຸດກ່ຽວກັບຊີວິດຈິດໃຈຂອງພວກເຂົາ ເຊິ່ງສ່ວນຫຼາຍແມ່ນຖືກບັນທຶກໃນຈົດໝາຍ. ຈົດໝາຍສະແດງໃຫ້ເຫັນວ່າ ພຣະວິນຍານບໍລິສຸດປະຕິບັດພາລະກິດແນວໃດໃນເວລານັ້ນ. (ແນ່ນອນ, ບໍ່ວ່າໂປໂລຖືກຕີສອນ ຫຼື ໂຈມຕີດ້ວຍຄວາມໂຊກຮ້າຍ, ພາລະກິດທີ່ເພິ່ນປະຕິບັດນັ້ນແມ່ນໄດ້ຮັບການສັ່ງສອນຈາກພຣະວິນຍານບໍລິສຸດ, ເພິ່ນເປັນຄົນທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດໃນເວລານັ້ນ; ເປໂຕກໍເຊັ່ນກັນ ເພິ່ນຖືກໃຊ້ໂດຍພຣະວິນຍານບໍລິສຸດ, ແຕ່ເພິ່ນບໍ່ໄດ້ປະຕິບັດພາລະກິດຫຼາຍສໍ່າກັບໂປໂລ. ເຖິງແມ່ນວ່າພາລະກິດຂອງໂປໂລປະກອບມີຄວາມບໍ່ບໍລິສຸດຂອງມະນຸດ, ຈາກຈົດໝາຍທີ່ຂຽນຂຶ້ນໂດຍໂປໂລ ມັນສາມາດເຫັນເຖິງວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດໃນເວລານັ້ນ. ເສັ້ນທາງທີ່ໂປໂລນຳພາແມ່ນເສັ້ນທາງທີ່ຖືກຕ້ອງ, ມັນຖືກຕ້ອງແລ້ວ ແລະ ມັນເປັນເສັ້ນທາງຂອງພຣະວິນຍານບໍລິສຸດ).

ຖ້າເຈົ້າປາຖະໜາທີ່ຈະເຫັນພາລະກິດໃນຍຸກແຫ່ງພຣະບັນຍັດ ແລະ ເຫັນວ່າ ຊາວອິດສະຣາເອນຕິດຕາມວິທີທາງຂອງພຣະເຢໂຮວາແນວໃດ ແລ້ວເຈົ້າຕ້ອງອ່ານພຣະສັນຍາເດີມ; ຖ້າເຈົ້າປາຖະໜາທີ່ຈະເຂົ້າໃຈພາລະກິດໃນຍຸກແຫ່ງພຣະຄຸນ ແລ້ວເຈົ້າຕ້ອງອ່ານພຣະສັນຍາໃໝ່. ແຕ່ເຈົ້າຈະເຫັນພາລະກິດແຫ່ງຍຸກສຸດທ້າຍໄດ້ແນວໃດ? ເຈົ້າຕ້ອງຍອມຮັບການນຳພາຂອງພຣະເຈົ້າແຫ່ງປັດຈຸບັນ ແລະ ເຂົ້າສູ່ພາລະກິດແຫ່ງປັດຈຸບັນ, ຍ້ອນນີ້ແມ່ນພາລະກິດທີ່ໃໝ່ ແລະ ບໍ່ມີໃຜເຄີຍບັນທຶກມັນໃນພຣະຄຳພີມາກ່ອນ. ໃນປັດຈຸບັນ, ພຣະເຈົ້າໄດ້ກາຍມາເປັນເນື້ອໜັງ ແລະ ຄັດເລືອກຜູ້ຄົນອື່ນໆທີ່ຖືກເລືອກໃນປະເທດຈີນ. ພຣະເຈົ້າປະຕິບັດພາລະກິດໃນຜູ້ຄົນເຫຼົ່ານີ້, ພຣະອົງສືບຕໍ່ຈາກພາລະກິດຂອງພຣະອົງເທິງແຜ່ນດິນໂລກ ແລະ ສືບຕໍ່ຈາກພາລະກິດໃນຍຸກແຫ່ງພຣະຄຸນ. ພາລະກິດແຫ່ງປັດຈຸບັນແມ່ນເສັ້ນທາງທີ່ມະນຸດບໍ່ເຄີຍຍ່າງຈັກເທື່ອ ແລະ ເປັນຫົນທາງທີ່ບໍ່ມີໃຜເຄີຍໄດ້ເຫັນ. ມັນເປັນພາລະກິດທີ່ບໍ່ເຄີຍຖືກປະຕິບັດມາກ່ອນ, ມັນເປັນພາລະກິດຫຼ້າສຸດຂອງພຣະເຈົ້າເທິງແຜ່ນດິນໂລກ. ດ້ວຍເຫດນັ້ນ, ພາລະກິດທີ່ບໍ່ເຄີຍມີການປະຕິບັດມາກ່ອນຈຶ່ງບໍ່ແມ່ນປະຫວັດສາດ ເພາະປັດຈຸບັນກໍຄືປັດຈຸບັນ ແລະ ຍັງບໍ່ໄດ້ເປັນອະດີດເທື່ອ. ຜູ້ຄົນບໍ່ຮູ້ຈັກວ່າ ພຣະເຈົ້າໄດ້ປະຕິບັດພາລະກິດທີ່ຍິ່ງໃຫຍ່ກວ່າ, ໃໝ່ກວ່າເທິງແຜ່ນດິນໂລກ ແລະ ຢູ່ນອກອິດສະຣາເອນ, ມັນໄດ້ຂະຫຍາຍອອກນອກຂອບເຂດອິດສະຣາເອນແລ້ວ ແລະ ນອກເໜືອຄຳທຳນາຍຂອງພວກຜູ້ປະກາດພຣະທຳອີກດ້ວຍ, ມັນເປັນພາລະກິດທີ່ໃໝ່ ແລະ ມະຫັດສະຈັນ ເຊິ່ງຢູ່ນອກຄຳທຳນາຍ ແລະ ເປັນພາລະກິດທີ່ໃໝ່ກວ່າ ເຊິ່ງຢູ່ນອກເໜືອອິດສະຣາເອນ ແລະ ພາລະກິດທີ່ຜູ້ຄົນບໍ່ສາມາດສັງເກດເຫັນ ຫຼື ຈິນຕະນາການໄດ້. ແລ້ວພຣະຄຳພີຈະບັນທຶກຢ່າງຊັດເຈນກ່ຽວກັບພາລະກິດດັ່ງກ່າວໄດ້ແນວໃດ? ແມ່ນໃຜທີ່ສາມາດບັນທຶກລາຍລະອຽດທຸກສິ່ງໃນພາລະກິດຂອງປັດຈຸບັນໄວ້ລ່ວງໜ້າໄດ້ໂດຍບໍ່ມີການຕົກຕໍ່ເລີຍ? ແມ່ນໃຜສາມາດບັນທຶກພາລະກິດທີ່ຍິ່ງໃຫຍ່ ແລະ ເຕັມໄປດ້ວຍສະຕິປັນຍາທີ່ຂັດກັບທຳນຽມໃນໜັງສືສະພາບເກົ່າໆໄດ້? ພາລະກິດແຫ່ງ

ປັດຈຸບັນບໍ່ແມ່ນປະຫວັດສາດ ແລະ ດ້ວຍເຫດນັ້ນ ຖ້າເຈົ້າປາຖະໜາທີ່ຈະຍ່າງໃນເສັ້ນທາງໃໝ່ໃນປັດຈຸບັນ, ເຈົ້າຕ້ອງຫ່າງອອກຈາກພຣະຄຳພີ, ເຈົ້າຕ້ອງເບິ່ງໄກກວ່າໜັງສືແຫ່ງການທຳນາຍ ຫຼື ປະຫວັດສາດໃນພຣະຄຳພີ. ມີພຽງແຕ່ທາງດຽວນີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດຍ່າງໃນເສັ້ນທາງໃໝ່ຢ່າງຖືກຕ້ອງ ແລະ ມີພຽງແຕ່ວິທີນີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດເຂົ້າສູ່ອານາຈັກໃໝ່ ແລະ ພາລະກິດໃໝ່ໄດ້. ເຈົ້າຕ້ອງເຂົ້າໃຈວ່າ ເປັນຫຍັງ ໃນປັດຈຸບັນ ເຈົ້າຈຶ່ງຖືກຮຽກຮ້ອງບໍ່ໃຫ້ອ່ານພຣະຄຳພີ, ເປັນຫຍັງຈຶ່ງມີພາລະກິດອື່ນທີ່ແຕກຕ່າງຈາກພຣະຄຳພີ, ເປັນຫຍັງພຣະເຈົ້າຈຶ່ງບໍ່ຊອກຫາການປະຕິບັດທີ່ໃໝ່ກວ່າ ແລະ ມີລາຍລະອຽດຫຼາຍກວ່າໃນພຣະຄຳພີ ແລະ ກົງກັນຂ້າມເປັນຫຍັງຈຶ່ງມີພາລະກິດທີ່ຍິ່ງໃຫຍ່ກວ່າພຣະຄຳພີ. ນີ້ຄືສິ່ງທັງໝົດທີ່ພວກເຈົ້າຄວນເຂົ້າໃຈ. ເຈົ້າຕ້ອງຮູ້ຈັກເຖິງຄວາມແຕກຕ່າງລະຫວ່າງພາລະກິດເກົ່າ ແລະ ໃໝ່ ແລະ ເຖິງແມ່ນວ່າເຈົ້າບໍ່ໄດ້ອ່ານພຣະຄຳພີ, ເຈົ້າຕ້ອງສາມາດວິເຄາະມັນໃຫ້ໄດ້ຢ່າງລະອຽດ; ຖ້າບໍ່ດັ່ງນັ້ນ ເຈົ້າກໍຍັງຈະນະມັດສະການພຣະຄຳພີ ແລະ ມັນຈະຫຍຸ້ງຍາກສຳລັບເຈົ້າທີ່ຈະເຂົ້າສູ່ພາລະກິດໃໝ່ ແລະ ປະສົບກັບການປ່ຽນແປງຕ່າງໆ. ໃນເມື່ອມີຫົນທາງທີ່ສູງສົ່ງກວ່າ, ເປັນຫຍັງຈຶ່ງຕ້ອງຮຽນຮູ້ຫົນທາງທີ່ຕໍ່າ ແລະ ຫຼ້າສະໄໝນັ້ນ? ໃນເມື່ອມີພຣະທຳທີ່ໃໝ່ກວ່າ ແລະ ພາລະກິດທີ່ໃໝ່ກວ່າ, ເປັນຫຍັງຈຶ່ງຕ້ອງດຳລົງຊີວິດທ່າມກາງການບັນທຶກທາງປະຫວັດສາດທີ່ເກົ່າແກ່ນັ້ນ? ຖ້ອຍຄຳໃໝ່ສາມາດສະໜອງໃຫ້ກັບເຈົ້າ ເຊິ່ງພິສູດໃຫ້ເຫັນວ່າ ນີ້ແມ່ນພາລະກິດທີ່ໃໝ່; ການບັນທຶກທີ່ເກົ່າແກ່ບໍ່ສາມາດເຮັດໃຫ້ເຈົ້າອີ່ມອົກອີ່ມໃຈໄດ້ ແລະ ຕອບສະໜອງຄວາມຕ້ອງການຂອງເຈົ້າໃນປັດຈຸບັນໄດ້ ເຊິ່ງພິສູດໃຫ້ເຫັນວ່າ ພວກມັນເປັນປະຫວັດສາດ ແລະ ບໍ່ແມ່ນພາລະກິດໃນຍຸກປັດຈຸບັນ. ຫົນທາງທີ່ສູງສົ່ງທີ່ສຸດແມ່ນພາລະກິດທີ່ໃໝ່ທີ່ສຸດ ແລະ ດ້ວຍພາລະກິດທີ່ໃໝ່ ບໍ່ວ່າຫົນທາງໃນອະດີດຈະສູງສົ່ງສໍ່າໃດ, ມັນກໍ່ເປັນພຽງປະຫວັດສາດທີ່ຜູ້ຄົນຫຼຽວເບິ່ງຄືນຫຼັງ ແລະ ບໍ່ວ່າມັນຈະມີຄຸນຄ່າໃນການອ້າງອີງແນວໃດກໍຕາມ ມັນກໍຍັງເປັນວິທີທາງທີ່ເກົ່າແກ່. ເຖິງແມ່ນວ່າ ມັນຖືກບັນທຶກໄວ້ໃນ “ໜັງສືສັກສິດ”, ວິທີທາງທີ່ເກົ່າແກ່ກໍຍັງເປັນປະຫວັດສາດຢູ່ດີ; ເຖິງແມ່ນ ບໍ່ມີການບັນທຶກກ່ຽວກັບມັນໃນ “ໜັງສືສັກສິດ”, ວິທີທາງທີ່ໃໝ່ແມ່ນຢູ່ໃນຍຸກປັດຈຸບັນ. ຫົນທາງນີ້ສາມາດຊ່ວຍເຈົ້າໄດ້ ແລະ ຫົນທາງນີ້ສາມາດປ່ຽນແປງເຈົ້າໄດ້ ຍ້ອນນີ້ແມ່ນພາລະກິດຂອງພຣະວິນຍານບໍລິສຸດ.

ພວກເຈົ້າຕ້ອງເຂົ້າໃຈພຣະຄຳພີ, ພາລະກິດນີ້ເປັນສິ່ງທີ່ຈຳເປັນທີ່ສຸດ! ໃນປັດຈຸບັນ, ເຈົ້າຕ້ອງບໍ່ອ່ານພຣະຄຳພີເທົ່ານັ້ນ ຍ້ອນບໍ່ມີຫຍັງໃໝ່ໃນພຣະຄຳພີ; ມັນເປັນສິ່ງທີ່ເກົ່າແກ່ທັງໝົດ. ພຣະຄຳພີເປັນໜັງສືທາງປະຫວັດສາດ ແລະ ຖ້າເຈົ້າໄດ້ກິນ ແລະ ດື່ມພຣະສັນຍາເດີມໃນລະຫວ່າງຍຸກແຫ່ງພຣະຄຸນນັ້ນກໍຄື ຖ້າເຈົ້າໄດ້ນຳສິ່ງທີ່ຮຽກຮ້ອງໃນເວລາຂອງພຣະສັນຍາເດີມນັ້ນມາປະຕິບັດໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຢຊູກໍຈະປະຕິເສດເຈົ້າ ແລະ ຕັດສິນລົງໂທດ; ຖ້າເຈົ້າໄດ້ນຳພຣະສັນຍາເດີມມາໃຊ້ໃນພາລະກິດຂອງພຣະເຢຊູ ເຈົ້າກໍຈະເປັນພວກຟາຣີຊາຍ. ໃນປັດຈຸບັນ ຖ້າເຈົ້ານຳພຣະສັນຍາເດີມ ແລະ ໃໝ່ມາລວມກັນເພື່ອກິນ ແລະ ດື່ມ ແລະ ປະຕິບັດ ແລ້ວພຣະເຈົ້າແຫ່ງປັດຈຸບັນກໍຈະຕັດສິນລົງໂທດເຈົ້າ; ເຈົ້າກໍຈະຕາມພາລະກິດຂອງພະວິນຍານບໍລິສຸດແຫ່ງປັດຈຸບັນບໍ່ທັນ! ຖ້າເຈົ້າກິນ ແລະ ດື່ມພຣະສັນຍາເດີມ ແລະ ພຣະສັນຍາໃໝ່ ແລ້ວເຈົ້າກໍຢູ່ນອກກະແສຂອງພຣະວິນຍານບໍລິສຸດ! ໃນ

ລະຫວ່າງຍຸກຂອງພຣະເຢຊູ, ພຣະເຢຊູນຳພາຊາວຢິວ ແລະ ທຸກຄົນທີ່ຕິດຕາມພຣະອົງ ໂດຍອີງຕາມພາລະກິດຂອງພຣະວິນຍານບໍລິສຸດທີ່ຢູ່ໃນພຣະອົງໃນເວລານັ້ນ. ພຣະອົງບໍ່ໄດ້ຖືພຣະຄຳພີເປັນຫຼັກພື້ນຖານໃນສິ່ງທີ່ພຣະອົງກະທຳ ແຕ່ຊົງກ່າວຕາມພາລະກິດຂອງພຣະອົງ; ພຣະອົງບໍ່ສົນໃຈກັບສິ່ງທີ່ພຣະຄຳພີກ່າວ ຫຼື ພຣະອົງບໍ່ໄດ້ຄົ້ນຫາເສັ້ນທາງເພື່ອນຳພາຜູ້ຕິດຕາມຂອງພຣະອົງຈາກພຣະຄຳພີ. ເລີ່ມຕັ້ງແຕ່ຕອນທີ່ພຣະອົງປະຕິບັດພາລະກິດ, ພຣະອົງເຜີຍແຜ່ຫົນທາງແຫ່ງຄວາມສຳນຶກຜິດ ເຊິ່ງເປັນພຣະທຳທີ່ບໍ່ເຄີຍກ່າວເຖິງໃນຄຳທຳນາຍຂອງພຣະສັນຍາເດີມຢ່າງແນ່ນອນ. ບໍ່ພຽງແຕ່ພຣະອົງບໍ່ປະຕິບັດຕາມພຣະຄຳພີເທົ່ານັ້ນ ແຕ່ພຣະອົງຍັງນຳເສັ້ນທາງໃໝ່ອີກດ້ວຍ ແລະ ປະຕິບັດພາລະກິດໃໝ່. ພຣະອົງບໍ່ເຄີຍອ້າງອີງເຖິງພຣະຄຳພີເວລາທີ່ພຣະອົງເທດສະໜາ. ໃນລະຫວ່າງຍຸກແຫ່ງພຣະບັນຍັດ, ບໍ່ມີໃຜທີ່ສາມາດປະຕິບັດສິ່ງອັດສະຈັນໃນການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ. ດ້ວຍເຫດນັ້ນ ພາລະກິດຂອງພຣະອົງ, ຄຳສັ່ງສອນຂອງພຣະອົງ ແລະ ສິດອຳນາດ ແລະ ລິດອຳນາດຂອງພຣະອົງກໍ່ເກີນມະນຸດທີ່ຢູ່ໃນຍຸກແຫ່ງພຣະບັນຍັດເຊັ່ນກັນ. ພຣະເຢຊູພຽງແຕ່ປະຕິບັດພາລະກິດໃໝ່ກວ່າຂອງພຣະອົງເທົ່ານັ້ນ ແລະ ເຖິງແມ່ນມີຫຼາຍຄົນທີ່ຕັດສິນລົງໂທດພຣະອົງໂດຍໃຊ້ພຣະຄຳພີ ແລະ ຍິ່ງໄປກວ່ານັ້ນຍັງໃຊ້ພຣະສັນຍາເດີມເພື່ອຄຶງພຣະອົງທີ່ໄມ້ກາງແຂນ, ແຕ່ພາລະກິດຂອງພຣະອົງກໍຍັງເໜືອກວ່າພຣະສັນຍາເດີມຢູ່ດີ; ຖ້າມັນບໍ່ເປັນແບບນັ້ນ ແລ້ວເປັນຫຍັງຜູ້ຄົນຈຶ່ງຄຶງພຣະອົງທີ່ໄມ້ກາງແຂນ? ມັນບໍ່ແມ່ນຍ້ອນວ່າ ບໍ່ໄດ້ມີການເວົ້າຫຍັງໃນພຣະສັນຍາເດີມກ່ຽວກັບການສັ່ງສອນຂອງພຣະອົງ ແລະ ຄວາມສາມາດຂອງພຣະອົງໃນການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍບໍ? ພາລະກິດຂອງພຣະອົງແມ່ນຖືກປະຕິບັດເພື່ອນຳເສັ້ນທາງໃໝ່, ມັນບໍ່ແມ່ນການເລີ່ມຕົ້ນຕໍ່ສູ້ກັບພຣະຄຳພີຢ່າງຕັ້ງໃຈ ຫຼື ຖິ້ມພຣະສັນຍາເດີມຢ່າງຕັ້ງໃຈ. ພຣະອົງພຽງແຕ່ມາເພື່ອປະຕິບັດພັນທະກິດຂອງພຣະອົງ, ເພື່ອນຳພາລະກິດໃໝ່ມາສູ່ຜູ້ຄົນທີ່ກະຫາຍຫາ ແລະ ສະແຫວງຫາພຣະອົງ. ພຣະອົງບໍ່ໄດ້ມາເພື່ອອະທິບາຍພຣະສັນຍາເດີມ ຫຼື ດຳລົງພາລະກິດຂອງພຣະສັນຍາເດີມ. ພາລະກິດຂອງພຣະອົງບໍ່ແມ່ນເພື່ອເຮັດໃຫ້ຍຸກແຫ່ງພຣະບັນຍັດສືບຕໍ່ພັດທະນາ, ບໍ່ແມ່ນພາລະກິດທີ່ຍຶດຖືພຣະຄຳພີເປັນພື້ນຖານ; ພຣະເຢຊູພຽງແຕ່ມາເພື່ອປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ. ສະນັ້ນ, ພຣະອົງບໍ່ໄດ້ອະທິບາຍເຖິງຄຳທຳນາຍໃນພຣະສັນຍາເດີມ ຫຼື ພຣະອົງບໍ່ໄດ້ປະຕິບັດພາລະກິດຕາມພຣະທຳຂອງພຣະສັນຍາເດີມໃນຍຸກແຫ່ງພຣະບັນຍັດ. ພຣະອົງປະຕິບັດສິ່ງທີ່ພຣະສັນຍາເດີມກ່າວໄວ້, ພຣະອົງບໍ່ສົນໃຈວ່າ ມັນເຫັນພ້ອມກັບພາລະກິດຂອງພຣະອົງ ຫຼື ບໍ ແລະ ບໍ່ສົນໃຈວ່າ ຄົນອື່ນຮູ້ຈັກຫຍັງແດ່ກ່ຽວກັບພາລະກິດຂອງພຣະອົງ ຫຼື ພວກເຂົາຕັດສິນລົງໂທດພາລະກິດຂອງພຣະອົງແນວໃດ. ພຣະອົງພຽງແຕ່ສືບຕໍ່ປະຕິບັດພາລະກິດທີ່ພຣະອົງຄວນເຮັດ ເຖິງແມ່ນຫຼາຍຄົນໄດ້ໃຊ້ຄຳທຳນາຍຂອງຜູ້ປະກາດພຣະທຳໃນພຣະສັນຍາເດີມເພື່ອຕັດສິນລົງໂທດພຣະອົງ. ສຳລັບຜູ້ຄົນແລ້ວ ມັນເບິ່ງຄືກັບວ່າ ພາລະກິດຂອງພຣະອົງບໍ່ມີຫຼັກພື້ນຖານ ແລະ ມີຫຼາຍຢ່າງທີ່ບໍ່ຖືກກັນກັບການບັນທຶກໃນພຣະສັນຍາເດີມ. ສິ່ງນີ້ບໍ່ແມ່ນຄວາມຜິດຂອງມະນຸດບໍ? ຕ້ອງນຳໃຊ້ທິດສະດີກັບພາລະກິດຂອງພຣະເຈົ້າບໍ? ແລ້ວພຣະເຈົ້າຕ້ອງເຮັດພາລະກິດຕາມຄຳທຳນາຍຂອງຜູ້ປະກາດພຣະທຳບໍ? ໃນທີ່ສຸດແລ້ວ ສິ່ງໃດຍິ່ງໃຫຍ່ກວ່າກັນ: ພຣະເຈົ້າ

ຫຼື ພຣະຄຳພີ? ເປັນຫຍັງພຣະເຈົ້າຈຶ່ງຕ້ອງເຮັດພາລະກິດຕາມພຣະຄຳພີ? ມັນເປັນຍ້ອນພຣະເຈົ້າບໍ່ມີສິດໃຫຍ່ກວ່າພຣະຄຳພີບໍ? ພຣະເຈົ້າບໍ່ສາມາດອອກຈາພຣະຄຳພີ ແລະ ປະຕິບັດພາລະກິດອື່ນໄດ້ບໍ? ເປັນຫຍັງພຣະເຢຊູ ແລະ ພວກສາວົກຂອງພຣະອົງຈຶ່ງບໍ່ຮັກສາວັນຊະບາໂຕ? ຖ້າພຣະອົງຕ້ອງປະຕິບັດຕາມວັນຊະບາໂຕ ແລະ ພຣະບັນຍັດແຫ່ງພຣະສັນຍາເດີມ, ເປັນຫຍັງພຣະເຢຊູຈຶ່ງບໍ່ຮັກສາວັນຊະບາໂຕຫຼັງຈາກທີ່ພຣະອົງສະເດັດມາ ແຕ່ກົງກັນຂ້າມ ພຣະອົງລ້າງຕີນ, ຜ້າຄຸມຫົວ, ຫັກເຂົ້າຈີ່ ແລະ ດື່ມເຫຼົ້າແວງ? ທຸກສິ່ງທີ່ກ່າວມານີ້ບໍ່ໄດ້ຢູ່ພຣະບັນຍັດແຫ່ງພຣະສັນຍາເດີມບໍ່ແມ່ນບໍ? ຖ້າພຣະເຢຊູນັບຖືພຣະສັນຍາເດີມ, ເປັນຫຍັງພຣະອົງຈຶ່ງຝ່າຝືນຫຼັກຄຳສອນເຫຼົ່ານີ້? ເຈົ້າຄວນຮູ້ຈັກວ່າ ສິ່ງໃດມາກ່ອນ ພຣະເຈົ້າ ຫຼື ພຣະຄຳພີ! ເມື່ອເປັນພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕ, ພຣະອົງບໍ່ສາມາດເປັນພຣະຜູ້ເປັນເຈົ້າແຫ່ງພຣະຄຳພີບໍ?

ພາລະກິດທີ່ພຣະເຢຊູປະຕິບັດໃນລະຫວ່າງເວລາແຫ່ງພຣະສັນຍາໃໝ່ໄດ້ເລີ່ມຕົ້ນພາລະກິດໃໝ່ອອກ ນັ້ນກໍຄື ພຣະອົງບໍ່ໄດ້ປະຕິບັດຕາມພາລະກິດຂອງພຣະສັນຍາເດີມ ຫຼື ພຣະອົງບໍ່ໄດ້ໃຊ້ພຣະທຳທີ່ພຣະເຢໂຮວາແຫ່ງພຣະສັນຍາເດີມໄດ້ຊົງກ່າວໄວ້. ພຣະອົງປະຕິບັດພາລະກິດຂອງພຣະອົງເອງ ແລະ ພຣະອົງປະຕິບັດພາລະກິດທີ່ໃໝ່ກວ່າ ແລະ ເປັນພາລະກິດທີ່ສູງສົ່ງກວ່າພຣະບັນຍັດ. ສະນັ້ນ, ພຣະອົງຈຶ່ງກ່າວວ່າ “ຈົ່ງຢ່າຄິດວ່າເຮົາມາເພື່ອທຳລາຍພຣະບັນຍັດ ຫຼື ຜູ້ປະກາດພຣະທຳ, ເຮົາບໍ່ໄດ້ມາເພື່ອທຳລາຍ ແຕ່ເພື່ອເຮັດໃຫ້ສຳເລັດ”. ດ້ວຍເຫດນັ້ນ ອີງຕາມສິ່ງທີ່ພຣະອົງໄດ້ເຮັດສຳເລັດ, ມີຄຳສັ່ງສອນຫຼາຍຢ່າງທີ່ໄດ້ຖືກທຳລາຍ. ໃນວັນຊະບາໂຕ ເມື່ອພຣະອົງພາພວກສາວົກຜ່ານທົ່ງນາ, ພວກເຂົາກໍເດັດ ແລະ ກິນຮວງເຂົ້າ; ພວກເຂົາບໍ່ໄດ້ຮັກສາວັນຊະບາໂຕ ແລະ ກ່າວວ່າ “ບຸດມະນຸດແມ່ນພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕ”. ໃນເວລານັ້ນ ຕາມກົດລະບຽບຂອງຊາວອິດສະຣາເອນແລ້ວ, ໃຜກໍຕາມທີ່ບໍ່ຮັກສາວັນຊະບາໂຕຈະຖືກລົງໂທດແກວ່ງຫີນໃສ່ຈົນຕາຍ. ເຖິງຢ່າງໃດກໍຕາມ, ພຣະເຢຊູບໍ່ໄດ້ເຂົ້າໄປໃນພຣະວິຫານ ຫຼື ຮັກສາວັນຊະບາໂຕ ແລະ ພາລະກິດຂອງພຣະອົງບໍ່ໄດ້ຖືກປະຕິບັດໂດຍພຣະເຢໂຮວາໃນລະຫວ່າງເວລາແຫ່ງພຣະສັນຍາເດີມ. ດ້ວຍເຫດນັ້ນ ພາລະກິດທີ່ພຣະເຢຊູກະທຳໃຫຍ່ກວ່າພຣະບັນຍັດແຫ່ງພຣະສັນຍາເດີມ, ມັນສູງສົ່ງກວ່າພຣະບັນຍັດ ແລະ ບໍ່ສອດຄ່ອງກັບພຣະບັນຍັດ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຢຊູບໍ່ໄດ້ປະຕິບັດພາລະກິດຕາມພຣະບັນຍັດແຫ່ງພຣະສັນຍາເດີມ, ແລະ ໄດ້ທຳລາຍຄຳສັ່ງສອນເຫຼົ່ານັ້ນແລ້ວ. ແຕ່ຊາວອິດສະຣາເອນຍຶດຕິດກັບພຣະຄຳພີຢ່າງດຸເດືອດ ແລະ ກ່າວໂທດພຣະເຢຊູ, ນີ້ບໍ່ແມ່ນການປະຕິເສດພາລະກິດຂອງພຣະເຢຊູບໍ? ມື້ນີ້, ໂລກແຫ່ງສາສະໜາຍັງຍຶດຕິດກັບພຣະຄຳພີຢ່າງດຸເດືອດ ແລະ ບາງຄົນເວົ້າວ່າ “ພຣະຄຳພີເປັນໜັງສືທີ່ສັກສິດ ແລະ ຕ້ອງອ່ານພຣະຄຳພີ”. ບາງຄົນເວົ້າວ່າ “ພາລະກິດຂອງພຣະເຈົ້າຕ້ອງດຳລົງຕະຫຼອດໄປ, ພຣະສັນຍາເດີມແມ່ນຄຳໝັ້ນສັນຍາຂອງພຣະເຈົ້າກັບຊາວອິດສະຣາເອນ ແລະ ບໍ່ສາມາດປະຖິ້ມໄດ້ ແລະ ຕ້ອງຮັກສາວັນຊະບາໂຕຢູ່ສະເໝີ!” ພວກເຂົາບໍ່ເປັນຕາຫົວຂວັນບໍ? ເປັນຫຍັງພຣະເຢຊູຈຶ່ງບໍ່ຮັກສາວັນຊະບາໂຕ? ພຣະອົງກຳລັງເຮັດບາບບໍ? ແມ່ນໃຜສາມາດເຂົ້າໃຈສິ່ງຕ່າງໆເຫຼົ່ານັ້ນຢ່າງຖີ່ຖ້ວນ? ບໍ່ວ່າຜູ້ຄົນຈະອ່ານພຣະຄຳພີແນວໃດ, ມັນເປັນໄປບໍ່ໄດ້ທີ່ຈະຮູ້ຈັກພາລະກິດຂອງພຣະເຈົ້າ

ໂດຍໃຊ້ສິດອຳນາດແຫ່ງຄວາມເຂົ້າໃຈຂອງພວກເຂົາ. ບໍ່ພຽງແຕ່ພວກເຂົາຈະບໍ່ໄດ້ຮັບຄວາມຮູ້ທີ່ບໍລິສຸດກ່ຽວກັບພຣະເຈົ້າ ແຕ່ແນວຄິດຂອງພວກເຂົາກໍຍັງຈະຊົ່ວຮ້າຍຫຼາຍຂຶ້ນກວ່າເກົ່າ ຈົນເຖິງຂັ້ນທີ່ພວກເຂົາຈະເລີ່ມຕໍ່ຕ້ານພຣະເຈົ້າ. ຖ້າບໍ່ແມ່ນຍ້ອນການບັງເກີດເປັນມະນຸດຂອງພຣະເຈົ້າໃນປັດຈຸບັນ, ຜູ້ຄົນຈະຖືກທຳລາຍດ້ວຍແນວຄິດຂອງພວກເຂົາເອງ ແລະ ພວກເຂົາຈະຕາຍໃນລະຫວ່າງການຕີສອນຂອງພຣະເຈົ້າ.

# ກ່ຽວກັບພຣະຄຳພີ (2)

ພຣະຄຳພີຍັງຖືກເອີ້ນວ່າ ພຣະສັນຍາເດີມ ແລະ ໃໝ່. ພວກເຈົ້າຮູ້ບໍ່ວ່າ "ພຣະສັນຍາ" ໝາຍເຖິງຫຍັງ? "ພຣະສັນຍາ" ໃນພຣະສັນຍາເດີມມາຈາກຄຳໝັ້ນສັນຍາຂອງພຣະເຈົ້າເຢໂຮວາທີ່ມີຕໍ່ປະຊາຊົນອິດສະຣາເອນ ໃນຕອນທີ່ພຣະອົງຂ້າຊາວອີຢິບ ແລະ ຊ່ວຍຊາວອິດສະຣາເອນຈາກຟາໂຣ. ແນ່ນອນ, ເຄື່ອງພິສູດຂອງຄຳໝັ້ນສັນຍານີ້ແມ່ນເລືອດຂອງແກະທີ່ທາໄວ້ເທິງຂອບປະຕູ ໂດຍທີ່ພຣະເຈົ້າສ້າງຄຳໝັ້ນສັນຍາກັບມະນຸດ ເຊິ່ງເປັນຄຳໝັ້ນສັນຍາທີ່ວ່າ ທຸກຄົນທີ່ມີເລືອດແກະຢູ່ເທິງ ແລະ ຂ້າງຂອບປະຕູແມ່ນຊາວອິດສະຣາເອນ, ພວກເຂົາແມ່ນຄົນທີ່ພຣະເຈົ້າຊົງເລືອກໄວ້ ແລະ ພວກເຂົາຈະຖືກພຣະເຢໂຮວາລະເວັ້ນ (ຍ້ອນວ່າ ໃນຕອນນັ້ນ ພຣະເຢໂຮວາກຳລັງຈະຂ້າບຸດຊາຍກົກທັງໝົດຂອງອີຢິບ ລວມທັງແກະ ແລະ ງົວຄວາຍຫົວປີ). ຄຳໝັ້ນສັນຍານີ້ມີຄວາມໝາຍຢູ່ສອງລະດັບ. ບໍ່ມີຄົນໃດ ຫຼື ສັດໂຕໃດຂອງອີຢິບທີ່ຈະໄດ້ຮັບການຊ່ວຍເຫຼືອຈາກພຣະເຢໂຮວາ; ພຣະອົງຈະຂ້າບຸດຊາຍກົກລວມທັງແກະ ແລະ ງົວຄວາຍຫົວປີທັງໝົດ. ສະນັ້ນ ໃນໜັງສືຫຼາຍເຫຼັ້ມແຫ່ງການທຳນາຍ, ມັນຈຶ່ງຖືກທຳນາຍລ່ວງໜ້າໄວ້ວ່າ ຊາວອີຢິບຈະຖືກຕີສອນຢ່າງຮຸນແຮງ ເຊິ່ງເປັນຜົນມາຈາກຄຳໝັ້ນສັນຍາຂອງພຣະເຢໂຮວາ. ນີ້ແມ່ນຄວາມໝາຍໃນລະດັບທຳອິດຂອງຄຳໝັ້ນສັນຍາ. ພຣະເຢໂຮວາໄດ້ຂ້າບຸດຊາຍກົກຂອງອີຢິບ ແລະ ສັດລ້ຽງຫົວປີທັງໝົດຂອງອີຢິບ ແລະ ພຣະອົງລະເວັ້ນຊາວອິດສະຣາເອນທັງໝົດ ເຊິ່ງໝາຍຄວາມວ່າ ທຸກຄົນທີ່ເກີດຈາກດິນແດນແຫ່ງອິດສະຣາເອນແມ່ນຖືກພຣະເຢໂຮວາຮັກສາໄວ້ ແລະ ຈະຖືກລະເວັ້ນທຸກຄົນ; ພຣະອົງປາຖະໜາທີ່ຈະປະຕິບັດພາລະກິດໄລຍະຍາວໃນພວກເຂົາ ແລະ ສ້າງຄຳໝັ້ນສັນຍາກັບພວກເຂົາ ໂດຍໃຊ້ເລືອດແກະ. ຈາກຕອນນັ້ນເປັນຕົ້ນໄປ, ພຣະເຢໂຮວາຈະບໍ່ຂ້າຊາວອິດສະຣາເອນ ແລະ ກ່າວວ່າ ພວກເຂົາຈະເປັນຄົນທີ່ຖືກເລືອກຂອງພຣະອົງຕະຫຼອດໄປ. ທ່າມກາງສິບສອງຊົນເຜົ່າຂອງອິດສະຣາເອນ, ພຣະອົງຈະເລີ່ມລົງມືປະຕິບັດພາລະກິດຂອງພຣະອົງສຳລັບຍຸກແຫ່ງພຣະບັນຍັດທັງໝົດ, ພຣະອົງຈະເປີດເຜີຍພຣະບັນຍັດທຸກຂໍ້ຂອງພຣະອົງອອກໃຫ້ກັບຊາວອິດສະຣາເອນ ແລະ ເລືອກເອົາຜູ້ປະກາດພຣະທຳ ແລະ ຜູ້ພິພາກສາທ່າມກາງພວກເຂົາ ແລະ ພວກເຂົາຈະຢູ່ໃນຈຸດສູນກາງຂອງພາລະກິດຂອງພຣະເຈົ້າ. ພຣະເຢໂຮວາສ້າງຕັ້ງຄຳໝັ້ນສັນຍາກັບພວກເຂົາ ນັ້ນກໍຄື: ນອກຈາກຍຸກນີ້ແລ້ວ ຈະໄດ້ມີການປ່ຽນໄປ, ພຣະອົງຈະປະຕິບັດພາລະກິດທ່າມກາງຄົນທີ່ຖືກເລືອກເທົ່ານັ້ນ. ຄຳໝັ້ນສັນຍາຂອງພຣະເຢໂຮວາແມ່ນປ່ຽນແປງບໍ່ໄດ້ ຍ້ອນມັນເຮັດຂຶ້ນດ້ວຍເລືອດ ແລະ ຖືກສ້າງຂຶ້ນກັບປະຊາຊົນທີ່ພຣະອົງເລືອກ. ສິ່ງທີ່ສຳຄັນໄປກວ່ານັ້ນກໍ່ຄື ພຣະອົງໄດ້ເລືອກຂອບເຂດ ແລະ ເປົ້າໝາຍທີ່ເໝາະສົມເພື່ອເລີ່ມລົງມືປະຕິບັດພາລະກິດຂອງພຣະອົງສຳລັບຍຸກທັງໝົດ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຶ່ງເຫັນຄຳໝັ້ນສັນຍາເປັນສິ່ງທີ່ສຳຄັນເປັນພິເສດ. ສິ່ງນີ້ຄືຄວາມໝາຍລະດັບທີສອງຂອງຄຳໝັ້ນສັນຍາ. ຍົກເວັ້ນປະຖົມມະການ ເຊິ່ງເກີດຂຶ້ນກ່ອນການສ້າງຄຳໝັ້ນສັນຍາ, ໜັງສືອື່ນໆທຸກເຫຼັ້ມໃນພຣະສັນຍາເດີມໄດ້ບັນທຶກພາລະກິດຂອງພຣະເຈົ້າທ່າມກາງຊາວອິດສະຣາເອນ ຫຼັງຈາກທີ່ໄດ້ສ້າງຄຳໝັ້ນສັນຍາ. ແນ່ນອນ ມີການບັນທຶກບາງ

ເລື່ອງລາວກ່ຽວກັບຊາວຕ່າງຊາດ, ແຕ່ໂດຍລວມແລ້ວ ພຣະສັນຍາເດີມແມ່ນບັນທຶກພາລະກິດຂອງພຣະເຈົ້າໃນອິດສະຣາເອນ. ຍ້ອນຄຳໝັ້ນສັນຍາຂອງພຣະເຢໂຮວາທີ່ມີກັບຊາວອິດສະຣາເອນ, ໜັງສືທີ່ຂຽນຂຶ້ນໃນລະຫວ່າງຍຸກແຫ່ງພຣະບັນຍັດຈຶ່ງຖືກເອີ້ນວ່າ ພຣະສັນຍາເດີມ. ໜັງສືເຫຼົ່ານັ້ນຖືກຕັ້ງຊື່ຕາມຄຳໝັ້ນສັນຍາຂອງພຣະເຢໂຮວາທີ່ມີກັບຊາວອິດສະຣາເອນ.

ພຣະສັນຍາໃໝ່ຖືກຕັ້ງຊື່ຕາມພຣະໂລຫິດທີ່ພຣະເຢຊູຊົງລັ່ງອອກເທິງໄມ້ກາງແຂນ ແລະ ຄຳໝັ້ນສັນຍາຂອງພຣະອົງກັບທຸກຄົນທີ່ເຊື່ອໃນພຣະອົງ. ຄຳໝັ້ນສັນຍາຂອງພຣະເຢຊູຄື: ຜູ້ຄົນຕ້ອງເຊື່ອໃນພຣະອົງ ເພື່ອຄວາມຜິດບາບຂອງພວກເຂົາຈະໄດ້ຮັບການອະໄພບາບຍ້ອນເລືອດທີ່ພຣະອົງໄດ້ຫຼັ່ງອອກ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງຈະໄດ້ຮັບການຊ່ວຍໃຫ້ລອດພົ້ນ ແລະ ເກີດໃໝ່ຜ່ານທາງພຣະອົງ ແລະ ຈະບໍ່ໄດ້ເປັນຄົນບາບອີກຕໍ່ໄປ; ຜູ້ຄົນຕ້ອງເຊື່ອໃນພຣະອົງເພື່ອຮັບເອົາຄວາມກະລຸນາ ແລະ ຈະບໍ່ໄດ້ທົນທຸກທໍລະມານໃນນະຮົກຫຼັງຈາກທີ່ພວກເຂົາຕາຍໄປ. ໜັງສືທຸກເຫຼັ້ມທີ່ຂຽນຂຶ້ນໃນລະຫວ່າງຍຸກແຫ່ງພຣະຄຸນແມ່ນມາຈາກຄຳໝັ້ນສັນຍານີ້ ແລະ ໜັງສືທັງໝົດບັນທຶກພາລະກິດ ແລະ ຖ້ອຍຄຳທີ່ປາກົດຢູ່ໃນໜັງສືນັ້ນໆ. ໜັງສືເຫຼົ່ານັ້ນບໍ່ໄດ້ບັນທຶກນອກເໜືອໄປກວ່າຄວາມລອດພົ້ນແຫ່ງການຖືກຄຶງທີ່ໄມ້ກາງແຂນຂອງພຣະເຢຊູເຈົ້າ ຫຼື ຄຳໝັ້ນສັນຍາຂອງພຣະອົງ; ພວກມັນທັງໝົດເປັນໜັງສືທີ່ຖືກຂຽນຂຶ້ນໂດຍອ້າຍນ້ອງໃນພຣະຜູ້ເປັນເຈົ້າ ຜູ້ເຊິ່ງມີປະສົບການ. ສະນັ້ນ, ໜັງສືເຫຼົ່ານີ້ຈຶ່ງຖືກຕັ້ງຊື່ຂຶ້ນຕາມຄຳໝັ້ນສັນຍາເຊັ່ນກັນ ນັ້ນກໍຄື: ພວກມັນຖືກເອີ້ນວ່າ ພຣະສັນຍາໃໝ່. ພຣະສັນຍາທັງສອງນີ້ລວມເອົາແຕ່ຍຸກແຫ່ງບັນຍັດ ແລະ ຍຸກແຫ່ງພຣະຄຸນ ແລະ ບໍ່ມີສ່ວນກ່ຽວຂ້ອງກັນກັບຍຸກສຸດທ້າຍ. ສະນັ້ນ, ພຣະຄຳພີຈຶ່ງບໍ່ເປັນປະໂຫຍດຫຍັງຫຼາຍສຳລັບຜູ້ຄົນໃນປັດຈຸບັນທີ່ຢູ່ໃນຍຸກສຸດທ້າຍ. ຢ່າງຫຼາຍທີ່ສຸດ, ມັນກໍໃຊ້ເປັນບ່ອນອ້າງອີງຊົ່ວຄາວ ແຕ່ໂດຍພື້ນຖານແລ້ວ ມັນມີຄຸນຄ່າໃນການນຳໃຊ້ແຕ່ພຽງໜ້ອຍດຽວ. ແຕ່ເຖິງຢ່າງນັ້ນກໍຕາມ ຜູ້ຄົນທີ່ນັບຖືສາສະໜາຍັງເກັບຮັກສາໄວ້ເປັນຂອງມີຄ່າທີ່ສຸດ. ພວກເຂົາບໍ່ຮູ້ຈັກພຣະຄຳພີ; ພວກເຂົາຮູ້ພຽງແຕ່ວິທີການອະທິບາຍພຣະຄຳພີ ແລະ ບໍ່ຮູ້ເຖິງຕົ້ນກຳເນີດຂອງມັນຢ່າງເປັນພື້ນຖານ. ທ່າທີຂອງພວກເຂົາທີ່ມີຕໍ່ພຣະຄຳພີຄື: ທຸກສິ່ງທີ່ຢູ່ໃນພຣະຄຳພີແມ່ນຖືກຕ້ອງ, ມັນບໍ່ມີຄວາມບໍ່ຖືກຕ້ອງ ຫຼື ຂໍ້ຜິດພາດເລີຍ. ຍ້ອນພວກເຂົາໄດ້ກຳນົດກ່ອນວ່າ ພຣະຄຳພີຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດ, ພວກເຂົາຈຶ່ງສຶກສາ ແລະ ສຳຫຼວດມັນດ້ວຍຄວາມສົນໃຈເປັນຢ່າງຍິ່ງ. ຂັ້ນຕອນໃນປັດຈຸບັນຂອງພາລະກິດບໍ່ໄດ້ຖືກທຳນາຍໄວ້ໃນພຣະຄຳພີ. ບໍ່ເຄີຍມີການກ່າວເຖິງໃດເລີຍກ່ຽວກັບພາລະກິດແຫ່ງການເອົາຊະນະເລີຍທີ່ເປັນຈຸດມືດທີ່ສຸດຂອງທຸກບ່ອນ ຍ້ອນນີ້ແມ່ນພາລະກິດຫຼ້າສຸດ. ເນື່ອງຈາກວ່າຍຸກແຫ່ງພາລະກິດແຕກຕ່າງກັນ ແມ່ນແຕ່ພຣະເຢຊູເອງກໍຍັງບໍ່ຮູ້ວ່າຂັ້ນຕອນຂອງພາລະກິດນີ້ຈະຖືກກະທຳໃນຍຸກສຸດທ້າຍ ແລະ ດ້ວຍເຫດນັ້ນ ຜູ້ຄົນໃນຍຸກສຸດທ້າຍຈະຄົ້ນຫາຂັ້ນຕອນຂອງພາລະກິດນີ້ໃນພຣະຄຳພີໄດ້ແນວໃດ?

ຄົນສ່ວນຫຼາຍທີ່ອະທິບາຍພຣະຄຳພີນຳໃຊ້ຂໍ້ສະຫຼຸບອີງຕາມເຫດຜົນ ແລະ ບໍ່ມີເບື້ອງຫຼັງຕາມຄວາມເປັນຈິງເລີຍ. ພວກເຂົາພຽງແຕ່ນຳໃຊ້ເຫດຜົນເພື່ອສະຫຼຸບຄວາມໃນຫຼາຍສິ່ງຫຼາຍຢ່າງ. ປີແລ້ວປີເລົ່າ ກໍບໍ່ມີໃຜທີ່ກ້າວິເຄາະພຣະຄຳພີຢ່າງລະອຽດ ຫຼື ກ້າ “ປະຕິເສດ” ພຣະຄຳພີເລີຍ, ເພາະໜັງສືເຫຼັ້ມນີ້

ເປັນ "ໜັງສືທີ່ສັກສິດ" ແລະ ຜູ້ຄົນນະມັດສະການເໝືອນດັ່ງພຣະເຈົ້າ. ສິ່ງນີ້ເກີດຂຶ້ນມາເປັນເວລາຫຼາຍພັນປີແລ້ວ. ພຣະເຈົ້າບໍ່ສົນໃຈ ແລະ ບໍ່ມີໃຜເຄີຍຄົ້ນພົບເລື່ອງລາວພາຍໃນພຣະຄຳພີເລີຍ. ພວກເຮົາເວົ້າວ່າ ເຊີດຊູບູຊາພຣະຄຳພີກໍຄືການນະມັດສະການຮູບບູຊາ ແຕ່ບໍ່ມີຜູ້ເຊື່ອທີ່ເຫຼື້ອມໃສຄົນໃດກ້າທີ່ຈະເຫັນໃນລັກສະນະນີ້ ແລະ ພວກເຂົາຈະເວົ້າກັບເຈົ້າວ່າ "ອ້າຍນ້ອງເອີຍ! ຢ່າເວົ້າແບບນັ້ນ, ມັນຊ່າງເປັນສິ່ງທີ່ຮ້າຍແຮງເຫຼືອເກີນ! ເຈົ້າສາມາດໝິ່ນປະໝາດພຣະເຈົ້າໄດ້ແນວໃດ?" ຕໍ່ມາ ພວກເຂົາຈະນຳຄຳເວົ້າທີ່ເຈັບປວດມາໃຊ້: "ໂອ ພຣະເຢຊູຜູ້ຊົງເມດຕາເອີຍ, ພຣະຜູ້ເປັນເຈົ້າແຫ່ງຄວາມລອດພົ້ນ, ຂ້ານ້ອຍຂໍໃຫ້ພຣະອົງອະໄພຄວາມຜິດບາບຂອງເຂົາດ້ວຍເທີດ ຍ້ອນພຣະອົງເປັນພຣະຜູ້ເປັນເຈົ້າທີ່ຮັກມະນຸດ ແລະ ພວກຂ້ານ້ອຍທຸກຄົນໄດ້ເຮັດບາບ, ກະລຸນາສະແດງຄວາມເມດຕາໃຫ້ກັບພວກຂ້ານ້ອຍດ້ວຍເທີດ, ອາແມນ". ນີ້ຄືສິ່ງທີ່ບົ່ງບອກວ່າ ພວກເຂົາ "ຈອມປອມ" ສໍ່າໃດ; ຈະໃຫ້ພວກເຂົາຍອມຮັບຄວາມຈິງຢ່າງງ່າຍດາຍໄດ້ແນວໃດ? ຄຳເວົ້າຂອງເຈົ້າຈະເຮັດໃຫ້ພວກເຂົາຢ້ານກົວຢ່າງແຮງ. ບໍ່ມີໃຜທີ່ຈະກ້າຄິດວ່າ ພຣະຄຳພີສາມາດຖືກເປື້ອນເປິດ້ວຍຄວາມຄິດຂອງມະນຸດ ແລະ ແນວຄິດຂອງມະນຸດ ແລະ ບໍ່ມີໃຜທີ່ສາມາດເຫັນຂໍ້ບົກຜ່ອງນີ້. ບາງສິ່ງທີ່ຢູ່ໃນພຣະຄຳພີແມ່ນປະສົບການ ແລະ ຄວາມຮູ້ສ່ວນບຸກຄົນ, ບາງສິ່ງກໍແມ່ນແສງສະຫວ່າງຂອງພຣະວິນຍານບໍລິສຸດ ແລະ ນອກຈາກນັ້ນກໍຍັງມີການປົນເຈືອໂດຍສະຕິປັນຍາ ແລະ ຄວາມຄິດຂອງມະນຸດອີກດ້ວຍ. ພຣະເຈົ້າບໍ່ເຄີຍແຊກແຊງໃນສິ່ງເຫຼົ່ານີ້ແຕ່ກໍມີຂອບເຂດ ນັ້ນກໍຄື: ສິ່ງເຫຼົ່ານັ້ນບໍ່ສາມາດເກີນກວ່າຄວາມຄິດຂອງຄົນປົກກະຕິ ແລະ ຖ້າພວກມັນເກີນ ພວກມັນກໍກຳລັງແຊກແຊງ ແລະ ຂັດຂວາງພາລະກິດຂອງພຣະເຈົ້າ. ສິ່ງທີ່ເກີນກວ່າຄວາມຄິດຂອງມະນຸດປົກກະຕິແມ່ນພາລະກິດຂອງຊາຕານ ຍ້ອນມັນປົດຜູ້ຄົນອອກຈາກໜ້າທີ່ຂອງພວກເຂົາ, ມັນເປັນພາລະກິດຂອງຊາຕານ ແລະ ຖືກຄວບຄຸມໂດຍຊາຕານ ແລະ ໃນເວລານີ້ພຣະວິນຍານບໍລິສຸດຈະບໍ່ອະນຸຍາດໃຫ້ເຈົ້າປະຕິບັດແບບນັ້ນ. ບາງຄັ້ງ ອ້າຍເອື້ອຍນ້ອງບາງຄົນຖາມວ່າ "ມັນຖືກຕ້ອງບໍທີ່ຈະໃຫ້ຂ້ານ້ອຍປະຕິບັດພາລະກິດແບບນັ້ນແບບນີ້?" ເຮົາເບິ່ງວຸດທິພາວະຂອງພວກເຂົາ ແລະ ເວົ້າວ່າ "ຖືກຕ້ອງແລ້ວ!" ຍັງມີບາງຄົນທີ່ເວົ້າວ່າ "ຖ້າຂ້ານ້ອຍປະຕິບັດພາລະກິດໃນລັກສະນະແບບນັ້ນແບບນີ້, ສະພາວະຂອງຂ້ານ້ອຍປົກກະຕິແມ່ນບໍ?" ແລ້ວເຮົາເວົ້າວ່າ "ແມ່ນແລ້ວ! ມັນປົກກະຕິ, ປົກກະຕິເປັນພິເສດເລີຍ!" ຄົນອື່ນເວົ້າວ່າ "ມັນຖືກຕ້ອງບໍທີ່ເຮົາຈະປະຕິບັດພາລະກິດໃນລັກສະນະນີ້?" ແລ້ວເຮົາເວົ້າວ່າ "ບໍ່!" ພວກເຂົາເວົ້າວ່າ "ເປັນຫຍັງມັນຈຶ່ງຖືກຕ້ອງສຳລັບລາວ ແລະ ບໍ່ແມ່ນສຳລັບຂ້ານ້ອຍ?" ແລ້ວເຮົາເວົ້າວ່າ "ເພາະສິ່ງທີ່ເຈົ້າກຳລັງເຮັດແມ່ນມາຈາກຊາຕານ, ມັນເປັນສິ່ງລົບກວນ ແລະ ແຫຼ່ງທີ່ມາຂອງແຮງບັນດານໃຈຂອງເຈົ້າກໍບໍ່ຖືກຕ້ອງ". ຍັງມີບາງເວລາທີ່ພາລະກິດບໍ່ໄດ້ໄປໄກພໍສົມຄວນ ແລະ ອ້າຍເອື້ອຍນ້ອງກໍ່ບໍ່ຮູ້ກ່ຽວກັບເລື່ອງນັ້ນ. ບາງຄົນຖາມເຮົາວ່າ ມັນຖືກຕ້ອງບໍທີ່ຈະປະຕິບັດພາລະກິດໃນລັກສະນະໃດໜຶ່ງ ແລະ ເມື່ອເຮົາເຫັນວ່າ ການກະທຳຂອງພວກເຂົາຈະບໍ່ຂັດຂວາງພາລະກິດແຫ່ງອະນາຄົດ, ເຮົາບອກວ່າ ມັນດີງາມແລ້ວ. ພາລະກິດຂອງພຣະວິນຍານບໍລິສຸດມອບຂອບເຂດໃຫ້ກັບຜູ້ຄົນ; ຜູ້ຄົນບໍ່ຈຳເປັນຕ້ອງປະຕິບັດຕາມຄວາມປາຖະໜາຂອງພຣະວິນຍານບໍລິສຸດ ໂດຍໃສ່ໃຈກັບລາຍລະອຽດທຸກຢ່າງທີ່ພຣະອົງໄດ້ສັ່ງໄວ້ ຍ້ອນຜູ້ຄົນປະກອບ

ດ້ວຍຄວາມຄິດ ແລະ ຈຸດອ່ອນທີ່ປົກກະຕິ ແລະ ພວກເຂົາກໍມີຄວາມຕ້ອງການທາງເນື້ອໜັງບາງຢ່າງ, ພວກເຂົາມີບັນຫາທີ່ແທ້ຈິງ ແລະ ດ້ວຍພື້ນຖານແລ້ວ ສະໝອງຂອງພວກເຂົາມີຄວາມຄິດທີ່ພວກເຂົາບໍ່ມີວິທີຄວບຄຸມ. ທຸກສິ່ງທີ່ເຮົາຮຽກຮ້ອງຈາກຜູ້ຄົນກໍມີຂໍ້ຈຳກັດ. ບາງຄົນເຊື່ອວ່າ ພຣະທຳຂອງເຮົາບໍ່ແຈ່ມແຈ້ງ, ເຮົາກຳລັງບອກພວກເຂົາໃຫ້ປະຕິບັດຕາມວິທີໃດກໍໄດ້ ນັ້ນກໍຍ້ອນເຈົ້າບໍ່ເຂົ້າໃຈວ່າ ມັນມີຂອບເຂດທີ່ເໝາະສົມໃນເງື່ອນໄຂທີ່ຈຳເປັນຂອງເຮົາ. ຖ້າມັນເປັນໄປຕາມທີ່ເຈົ້າຈິນຕະນາການ, ຖ້າເຮົາຮຽກຮ້ອງທຸກຄົນໃນແບບດຽວກັນໂດຍບໍ່ມີການຍົກເວັ້ນ ແລະ ຮຽກຮ້ອງໃຫ້ພວກເຂົາທັງໝົດບັນລຸວຸດທິພາວະດຽວກັນ ແລ້ວມັນກໍຈະບໍ່ເກີດຜົນຫຍັງທັງໝົດ. ນີ້ແມ່ນການຮຽກຮ້ອງໃນສິ່ງທີ່ເປັນໄປບໍ່ໄດ້ ແລະ ມັນເປັນຫຼັກການຂອງພາລະກິດຂອງມະນຸດ, ບໍ່ແມ່ນຫຼັກການຂອງພາລະກິດຂອງພຣະເຈົ້າ. ພາລະກິດຂອງພຣະເຈົ້າໄດ້ຮັບການປະຕິບັດຕາມສະພາບການຕົວຈິງຂອງຜູ້ຄົນ ແລະ ອີງຕາມຄວາມສາມາດທີ່ມີມາຕັ້ງແຕ່ເກີດຂອງພວກເຂົາ. ນີ້ຍັງເປັນຫຼັກການແຫ່ງການເຜີຍແຜ່ຂ່າວປະເສີດນັ້ນກໍຄື ເຈົ້າຕ້ອງດຳເນີນການຢ່າງຊ້າໆ, ປ່ອຍໃຫ້ເປັນໄປຕາມທຳມະຊາດ; ມີພຽງແຕ່ເມື່ອເຈົ້າກ່າວຄວາມຈິງໃຫ້ກັບບາງຄົນຢ່າງຊັດເຈນ ພວກເຂົາຈຶ່ງຈະເຂົ້າໃຈໄດ້ ແລະ ມີພຽງແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະສາມາດບໍ່ສົນໃຈພຣະຄຳພີໄດ້. ຖ້າພຣະເຈົ້າບໍ່ປະຕິບັດພາລະກິດຂັ້ນຕອນນີ້ ແມ່ນໃຜຈະສາມາດທຳລາຍທຳນຽມນີ້ໄດ້? ແມ່ນໃຜທີ່ຈະສາມາດປະຕິບັດພາລະກິດໃໝ່? ແມ່ນໃຜທີ່ຈະສາມາດຄົ້ນພົບເສັ້ນທາງໃໝ່ ເຊິ່ງຢູ່ນອກພຣະຄຳພີ? ເພາະແນວຄິດຕາມປະເພນີຂອງຜູ້ຄົນ ແລະ ຈັນຍາບັນແບບສັກດິນາເປັນສິ່ງທີ່ຊົ່ວຮ້າຍຫຼາຍ, ພວກເຂົາຈຶ່ງບໍ່ມີຄວາມສາມາດທີ່ຈະປະຖິ້ມສິ່ງເຫຼົ່ານີ້ດ້ວຍພວກເຂົາເອງໄດ້ ຫຼື ພວກເຂົາບໍ່ມີຄວາມກ້າຫານທີ່ຈະເຮັດເລີຍ. ນັ້ນບໍ່ກ່າວເຖິງວິທີທີ່ຜູ້ຄົນໃນປັດຈຸບັນຖືກຄວບຄຸມໂດຍຂໍ້ພຣະທຳບາງຂໍ້ທີ່ຕາຍແລ້ວ ເຊິ່ງເປັນພຣະທຳທີ່ໄດ້ຄອບຄອງຫົວໃຈຂອງພວກເຂົາ. ພວກເຂົາຈະເຕັມໃຈປະຖິ້ມພຣະຄຳພີໄດ້ແນວໃດ? ພວກເຈົ້າຈະຍອມຮັບຫົນທາງທີ່ຢູ່ນອກພຣະຄຳພີຢ່າງງ່າຍດາຍໄດ້ແນວໃດ? ຍົກເວັ້ນເຈົ້າຈະສາມາດກ່າວເຖິງເລື່ອງລາວພາຍໃນພຣະຄຳພີ ແລະ ຫຼັກການຂອງພາລະກິດຂອງພຣະວິນຍານບໍລິສຸດຢ່າງແຈ່ມແຈ້ງ, ເພື່ອວ່າທຸກຄົນຈະໄດ້ເຊື່ອໝັ້ນຢ່າງສິ້ນເຊີງເຊິ່ງເປັນສິ່ງທີ່ຈຳເປັນທີ່ສຸດ. ນີ້ກໍຍ້ອນວ່າ ທຸກຄົນທີ່ຢູ່ພາຍໃນສາສະໜາເຄົາລົບພຣະຄຳພີ ແລະ ບູຊາມັນເໝືອນດັ່ງພຣະເຈົ້າ, ພວກເຂົາຍັງພະຍາຍາມຈຳກັດພຣະເຈົ້າພາຍໃນພຣະຄຳພີ ແລະ ມັນຍິ່ງຖືກກັບກໍລະນີທີ່ວ່າ ພວກເຂົາພຽງແຕ່ບັນລຸເປົ້າໝາຍຂອງພວກເຂົາ ຫຼັງຈາກພວກເຂົາໄດ້ຄຶງພຣະເຈົ້າໃສ່ໄມ້ກາງແຂນອີກຄັ້ງ.

# ກ່ຽວກັບພຣະຄຳພີ (3)

ບໍ່ແມ່ນທຸກສິ່ງທີ່ຢູ່ໃນພຣະຄຳພີຄືການບັນທຶກກ່ຽວກັບພຣະທຳທີ່ພຣະເຈົ້າຊົງກ່າວດ້ວຍພຣະອົງເອງ. ພຣະຄຳພີພຽງແຕ່ບັນທຶກພາລະກິດສອງຂັ້ນຕອນທີ່ຜ່ານມາຂອງພຣະເຈົ້າ ເຊິ່ງສ່ວນທີໜຶ່ງແມ່ນການບັນທຶກເຖິງຄຳທຳນາຍລ່ວງໜ້າຂອງຜູ້ປະກາດພຣະທຳ ແລະ ອີກສ່ວນໜຶ່ງແມ່ນປະສົບການ ແລະ ຄວາມຮູ້ທີ່ຖືກຂຽນຂຶ້ນໂດຍຜູ້ຄົນທີ່ພຣະເຈົ້າຊົງໃຊ້ຕະຫຼອດທັງຍຸກຕ່າງໆ. ປະສົບການຂອງມະນຸດຖືກເປື້ອນເປິດ້ວຍຄວາມຄິດເຫັນ ແລະ ຄວາມຮູ້ຂອງມະນຸດ ແລະ ນີ້ຄືສິ່ງທີ່ບໍ່ສາມາດຫຼີກເວັ້ນໄດ້. ໜັງສືຫຼາຍເຫຼັ້ມໃນພຣະຄຳພີແມ່ນມີແນວຄິດຂອງມະນຸດ, ອະຄະຕິຂອງມະນຸດ ແລະ ການເຂົ້າໃຈທີ່ບໍ່ສົມເຫດສົມຜົນຂອງມະນຸດ. ແນ່ນອນ, ພຣະທຳສ່ວນຫຼາຍແມ່ນຜົນຂອງແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດ ແລະ ພວກມັນກໍແມ່ນການເຂົ້າໃຈທີ່ຖືກຕ້ອງ, ແຕ່ກໍຍັງບໍ່ສາມາດເວົ້າໄດ້ວ່າ ພວກມັນແມ່ນການສຳແດງອອກທີ່ແນ່ນອນກ່ຽວກັບຄວາມຈິງທັງໝົດ. ມຸມມອງຂອງພວກມັນກ່ຽວກັບບາງສິ່ງບາງຢ່າງບໍ່ແຕກຕ່າງຫຍັງຈາກຄວາມຮູ້ທີ່ມາຈາກປະສົບການສ່ວນຕົວ ຫຼື ແສງສະຫວ່າງຂອງພຣະວິນຍານບໍລິສຸດ. ຄຳພະຍາກອນຂອງຜູ້ປະກາດພຣະທຳແມ່ນໄດ້ຮັບການສັ່ງສອນຈາກພຣະເຈົ້າເປັນການສ່ວນຕົວ ນັ້ນກໍຄື: ຄຳທຳນາຍປະເພດດຽວກັນກັບຂອງເອຊາຢາ, ດານີເອນ, ເອັດຊະຣາ, ເຢເຣມີຢາ ແລະ ເອເຊກີເອນ ແມ່ນມາຈາກການສັ່ງສອນໂດຍກົງຂອງພຣະວິນຍານບໍລິສຸດ; ຜູ້ຄົນເຫຼົ່ານີ້ເປັນນັກທຳນາຍ, ພວກເຂົາໄດ້ຮັບພຣະວິນຍານແຫ່ງການທຳນາຍ ແລະ ພວກເຂົາທັງໝົດແມ່ນຜູ້ປະກາດພຣະທຳແຫ່ງພຣະສັນຍາເດີມ. ໃນລະຫວ່າງຍຸກແຫ່ງພຣະບັນຍັດ, ຜູ້ຄົນເຫຼົ່ານີ້ ຜູ້ເຊິ່ງໄດ້ຮັບການດົນບັນດານຈາກພຣະເຢໂຮວາ ກໍໄດ້ກ່າວຄຳທຳນາຍຫຼາຍຢ່າງ ເຊິ່ງໄດ້ຮັບການສັ່ງສອນຈາກພຣະເຢໂຮວາໂດຍກົງ. ແລ້ວເປັນຫຍັງພຣະເຢໂຮວາຈຶ່ງປະຕິບັດພາລະກິດໃນພວກເຂົາ? ເພາະວ່າປະຊາຊົນອິດສະຣາເອນແມ່ນຜູ້ຄົນທີ່ພຣະເຈົ້າຊົງໄດ້ເລືອກໄວ້ແລ້ວ ນັ້ນກໍຄື ແລະ ພາລະກິດຂອງຜູ້ປະກາດພຣະທຳຕ້ອງຖືກກະທຳທ່າມກາງພວກເຂົາ; ນັ້ນຄືເຫດຜົນທີ່ຜູ້ປະກາດພຣະທຳສາມາດຮັບການເປີດເຜີຍດັ່ງກ່າວ. ຕາມຄວາມຈິງແລ້ວ ພວກເຂົາເອງກໍບໍ່ເຂົ້າໃຈການເປີດເຜີຍຂອງພຣະເຈົ້າທີ່ມີໃຫ້ພວກເຂົາ. ພຣະວິນຍານບໍລິສຸດກ່າວພຣະທຳເຫຼົ່ານັ້ນຜ່ານປາກຂອງພວກເຂົາ ເພື່ອຜູ້ຄົນໃນອະນາຄົດຈະສາມາດເຂົ້າໃຈເຖິງສິ່ງຕ່າງໆເຫຼົ່ານັ້ນ ແລະ ເຫັນວ່າ ພວກມັນແມ່ນພາລະກິດຂອງພຣະວິນຍານຂອງພຣະເຈົ້າ, ຂອງພຣະວິນຍານບໍລິສຸດຢ່າງແທ້ຈິງ ແລະ ບໍ່ໄດ້ມາຈາກມະນຸດ ແລະ ເພື່ອຢືນຢັນພາລະກິດຂອງພຣະວິນຍານບໍລິສຸດໃຫ້ກັບພວກເຂົາ. ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຢຊູເອງໄດ້ປະຕິບັດພາລະກິດທັງໝົດນີ້ແທນພວກເຂົາ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຶ່ງບໍ່ກ່າວຄຳທຳນາຍອີກຕໍ່ໄປ. ແລ້ວພຣະເຢຊູເປັນຜູ້ປະກາດພຣະທຳບໍ? ແນ່ນອນ, ພຣະເຢຊູເປັນຜູ້ປະກາດພຣະທຳ ແຕ່ພຣະອົງກໍ່ຍັງສາມາດປະຕິບັດພາລະກິດຂອງພວກອັກຄະສາວົກອີກດ້ວຍ, ນັ້ນກໍຄື ພຣະອົງສາມາດທັງກ່າວຄຳທຳນາຍ ແລະ ເທດສະໜາ ແລະ ສັ່ງສອນຜູ້ຄົນທົ່ວທັງດິນແດນ. ເຖິງຢ່າງໃດກໍຕາມ, ພາລະກິດທີ່ພຣະອົງຊົງປະຕິບັດ ແລະ ຕົວຕົນທີ່ພຣະອົງຊົງສະແດງໃຫ້ເຫັນນັ້ນບໍ່ແມ່ນສິ່ງ

ດຽວກັນ. ພຣະອົງມາເພື່ອໄຖ່ມວນມະນຸດຊາດ, ໄຖ່ມະນຸດຈາກຄວາມຜິດບາບ; ພຣະອົງເປັນຜູ້ປະກາດພຣະທໍາ ແລະ ເປັນອັກຄະສາວົກ, ແຕ່ຫຼາຍກວ່ານັ້ນ ພຣະອົງເປັນພຣະຄຣິດ. ຜູ້ປະກາດພຣະທໍາອາດກ່າວຄໍາທໍານາຍ, ແຕ່ມັນບໍ່ສາມາດເວົ້າໄດ້ວ່າຜູ້ປະກາດພຣະທໍານັ້ນເປັນພຣະຄຣິດ. ໃນເວລານັ້ນ, ພຣະເຢຊູກ່າວຄໍາທໍານາຍຫຼາຍຢ່າງ ແລະ ດ້ວຍເຫດນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ພຣະອົງເປັນຜູ້ປະກາດພຣະທໍາ ແຕ່ບໍ່ສາມາດເວົ້າໄດ້ວ່າ ພຣະອົງເປັນຜູ້ປະກາດພຣະທໍາ ແລະ ບໍ່ແມ່ນພຣະຄຣິດ. ນັ້ນກໍຍ້ອນວ່າ ພຣະອົງເປັນຕົວແທນພຣະເຈົ້າເອງໃນການປະຕິບັດຂັ້ນຕອນຂອງພາລະກິດ ແລະ ຕົວຕົນຂອງພຣະອົງກໍແຕກຕ່າງຈາກຕົວຕົນຂອງເອຊາຢາ ນັ້ນກໍຄື: ພຣະອົງມາເພື່ອເຮັດໃຫ້ພາລະກິດແຫ່ງການໄຖ່ບາບສໍາເລັດລົງ ແລະ ພຣະອົງຍັງຊົງຈັດກຽມໃຫ້ແກ່ຊີວິດຂອງມະນຸດອີກດ້ວຍ ແລະ ພຣະວິນຍານຂອງພຣະເຈົ້າກໍປາກົດໃນພຣະອົງໂດຍກົງ. ໃນພາລະກິດທີ່ພຣະອົງປະຕິບັດ, ບໍ່ໄດ້ມີການດົນບັນດານຈາກພຣະວິນຍານຂອງພຣະເຈົ້າ ຫຼື ຄໍາສັ່ງສອນຈາກພຣະເຢໂຮວາ. ກົງກັນຂ້າມ, ພຣະວິນຍານປະຕິບັດພາລະກິດໂດຍກົງ ເຊິ່ງນີ້ແມ່ນພຽງພໍທີ່ພິສູດໃຫ້ເຫັນວ່າ ພຣະເຢຊູບໍ່ເໝືອນກັບຜູ້ປະກາດພຣະທໍາ. ພາລະກິດທີ່ພຣະອົງປະຕິບັດນັ້ນແມ່ນພາລະກິດແຫ່ງການໄຖ່ບາບ, ຕໍ່ມາຈຶ່ງແມ່ນການກ່າວຄໍາທໍານາຍ. ພຣະອົງເປັນຜູ້ປະກາດພຣະທໍາ, ອັກຄະສາວົກ ແຕ່ຍິ່ງໄປກວ່ານັ້ນ ພຣະອົງເປັນພຣະຜູ້ໄຖ່. ໃນຂະນະດຽວກັນນັ້ນ, ຜູ້ທໍານາຍພຽງແຕ່ສາມາດກ່າວຄໍາທໍານາຍ ແລະ ບໍ່ສາມາດເປັນຕົວແທນພຣະວິນຍານຂອງພຣະເຈົ້າໄດ້ໃນການປະຕິບັດພາລະກິດ. ເພາະວ່າ ພຣະເຢຊູປະຕິບັດພາລະກິດຫຼາຍຢ່າງເຊິ່ງບໍ່ເຄີຍມີມະນຸດຄົນໃດປະຕິບັດມາກ່ອນ ແລະ ຍ້ອນວ່າພຣະອົງປະຕິບັດພາລະກິດແຫ່ງການໄຖ່ມະນຸດຊາດ, ສະນັ້ນ ພຣະອົງຈຶ່ງແຕກຕ່າງຈາກຄົນແບບເອຊາຢາ. ເຫດຜົນທີ່ບາງຄົນບໍ່ຍອມຮັບກະແສແຫ່ງປັດຈຸບັນ ກໍເພາະວ່າ ສິ່ງນີ້ໄດ້ສ້າງອຸປະສັກໃຫ້ກັບພວກເຂົາ. ພວກເຂົາເວົ້າວ່າ "ໃນພຣະສັນຍາເດີມນັ້ນ ຜູ້ປະກາດພຣະທໍາຫຼາຍຄົນກໍກ່າວພຣະທໍາຫຼາຍຂໍ້ເຊັ່ນກັນ ແລ້ວເປັນຫຍັງພວກເຂົາຈຶ່ງບໍ່ແມ່ນພຣະເຈົ້າທີ່ກາຍມາເປັນເນື້ອໜັງ? ພຣະເຈົ້າແຫ່ງປັດຈຸບັນກ່າວພຣະທໍາ, ສິ່ງນັ້ນພຽງພໍທີ່ຈະພິສູດວ່າພຣະອົງເປັນພຣະເຈົ້າທີ່ບັງເກີດເປັນມະນຸດແລ້ວບໍ? ເຈົ້າບໍ່ໄດ້ເຊີດຊູພຣະຄໍາພີ ຫຼື ເຈົ້າບໍ່ໄດ້ສຶກສາພຣະຄໍາພີ ແລ້ວເຈົ້າມີຫຼັກຖານຫຍັງທີ່ຈະເວົ້າວ່າ ພຣະອົງແມ່ນການບັງເກີດເປັນມະນຸດຂອງພຣະເຈົ້າ? ເຈົ້າເວົ້າວ່າ ພວກເຂົາໄດ້ຮັບການສັ່ງສອນຈາກພຣະວິນຍານບໍລິສຸດ ແລະ ເຈົ້າເຊື່ອວ່າ ພາລະກິດຂັ້ນຕອນນີ້ແມ່ນພາລະກິດທີ່ພຣະເຈົ້າປະຕິບັດດ້ວຍຕົວພຣະອົງ ແຕ່ແມ່ນຫຍັງຄືຫຼັກຖານທີ່ເຈົ້າມີສໍາລັບສິ່ງນີ້? ເຈົ້າໃຫ້ຄວາມສົນໃຈກັບພຣະທໍາຂອງພຣະເຈົ້າໃນປັດຈຸບັນ ແລະ ມັນເບິ່ງຄືກັບວ່າເຈົ້າໄດ້ປະຕິເສດ ແລະ ປະຖິ້ມພຣະຄໍາພີ". ແລ້ວພວກເຂົາກໍຈະເວົ້າໃຫ້ເຈົ້າວ່າ ເຈົ້າເຊື່ອໃນຄວາມເຫັນນອກຮີດ ແລະ ຄວາມຄິດນອກຄອກ.

ຖ້າເຈົ້າປາຖະໜາທີ່ຈະເປັນພະຍານໃຫ້ກັບພາລະກິດຂອງພຣະເຈົ້າໃນລະຫວ່າງຍຸກສຸດທ້າຍແລ້ວເຈົ້າຕ້ອງເຂົ້າໃຈເລື່ອງລາວພາຍໃນຂອງພຣະຄໍາພີ, ໂຄງສ້າງຂອງພຣະຄໍາພີ ແລະ ແກ່ນແທ້ຂອງພຣະຄໍາພີ. ໃນປັດຈຸບັນ, ຜູ້ຄົນເຊື່ອວ່າ ພຣະຄໍາພີຄືພຣະເຈົ້າ ແລະ ພຣະເຈົ້າກໍຄືພຣະຄໍາພີ. ດ້ວຍເຫດນັ້ນ ພວກເຂົາຈຶ່ງເຊື່ອວ່າ ພຣະທໍາທຸກຂໍ້ທີ່ຢູ່ໃນພຣະຄໍາພີກໍຄືພຣະທໍາທີ່ພຣະເຈົ້າໄດ້ກ່າວໄວ້ເທົ່ານັ້ນ

ແລະ ພຣະທຳທັງໝົດເຫຼົ່ານັ້ນແມ່ນຖືກກ່າວໂດຍພຣະອົງ. ທຸກຄົນທີ່ເຊື່ອພຣະເຈົ້າຍິ່ງຄິດວ່າ ເຖິງແມ່ນ ໜັງສືຫົກສິບຫົກເຫຼັ້ມໃນພຣະສັນຍາເດີມ ແລະ ໃໝ່ໄດ້ຖືກຂຽນຂຶ້ນໂດຍມະນຸດ, ແຕ່ພວກເຂົາແມ່ນໄດ້ຮັບການດົນບັນດານໃຈຈາກພຣະເຈົ້າ ແລະ ເປັນການບັນທຶກເຖິງຖ້ອຍຄຳຂອງພຣະວິນຍານບໍລິສຸດ. ນີ້ແມ່ນການເຂົ້າໃຈທີ່ບໍ່ຖືກຕ້ອງຂອງມະນຸດ ແລະ ມັນບໍ່ສອດຄ່ອງກັບຄວາມຈິງທັງໝົດ. ຄວາມຈິງແລ້ວ ນອກຈາກໜັງສືແຫ່ງການທຳນາຍ, ພຣະສັນຍາເດີມສ່ວນໃຫຍ່ແມ່ນການບັນທຶກທາງປະຫວັດສາດ. ຈົດໝາຍໃນພຣະສັນຍາໃໝ່ບາງສະບັບກໍມາຈາກປະສົບການຂອງມະນຸດ ແລະ ບາງສະບັບກໍມາຈາກແສງສະຫວ່າງຂອງພຣະວິນຍານບໍລິສຸດ; ຕົວຢ່າງ ຈົດໝາຍຂອງໂປໂລເກີດຈາກພາລະກິດຂອງມະນຸດຄົນໜຶ່ງ, ທຸກຂໍ້ຄວາມທັງໝົດແມ່ນເປັນຜົນມາຈາກແສງສະຫວ່າງຂອງພຣະວິນຍານບໍລິສຸດ ແລະ ຖືກຂຽນຂຶ້ນເພື່ອຄຣິສຕະຈັກ ແລະ ເປັນຖ້ອຍຄຳແຫ່ງການຕັກເຕືອນ ແລະ ການຊູໃຈສຳລັບອ້າຍເອື້ອຍນ້ອງໃນຄຣິສຕະຈັກ. ພວກມັນບໍ່ແມ່ນພຣະທຳທີ່ພຣະວິນຍານບໍລິສຸດໄດ້ກ່າວໄວ້ ເພາະໂປໂລບໍ່ສາມາດກ່າວແທນພຣະວິນຍານບໍລິສຸດໄດ້ ແລະ ເພິ່ນກໍບໍ່ໄດ້ເປັນຜູ້ປະກາດພຣະທຳ ແລ້ວແຮງໄກທີ່ເພິ່ນຈະເຫັນນິມິດທີ່ໂຢຮັນໄດ້ເຫັນ. ຈົດໝາຍຂອງເພິ່ນຖືກຂຽນຂຶ້ນສຳລັບຄຣິສຕະຈັກເອເຟໂຊ, ໂກຣິນໂທ, ກາລາເຕຍ ແລະ ຄຣິສຕະຈັກອື່ນໆ. ດ້ວຍເຫດນັ້ນ ຈົດໝາຍຂອງໂປໂລໃນພຣະສັນຍາໃໝ່ຈຶ່ງເປັນຈົດໝາຍທີ່ໂປໂລຂຽນຂຶ້ນສຳລັບຄຣິສຕະຈັກ ແລະ ບໍ່ໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດ ຫຼື ພວກມັນແມ່ນຖ້ອຍຂອງພຣະວິນຍານບໍລິສຸດໂດຍກົງ. ພວກມັນເປັນພຽງຄຳເວົ້າແຫ່ງການຕັກເຕືອນ, ການປອບໃຈ ແລະ ຊູໃຈທີ່ເພິ່ນຂຽນຂຶ້ນສຳລັບຄຣິສຕະຈັກໃນລະຫວ່າງຊ່ວງເວລາຂອງພາລະກິດຂອງເພິ່ນ. ດ້ວຍເຫດນັ້ນ ພວກມັນກໍຍັງເປັນການບັນທຶກກ່ຽວກັບພາລະກິດສ່ວນໃຫຍ່ຂອງໂປໂລໃນເວລານັ້ນ. ພວກມັນຖືກຂຽນຂຶ້ນສຳລັບທຸກຄົນທີ່ເປັນອ້າຍເອື້ອຍນ້ອງໃນພຣະຜູ້ເປັນເຈົ້າທຸກຄົນ ເພື່ອວ່າອ້າຍເອື້ອຍນ້ອງໃນຄຣິສຕະຈັກທັງໝົດໃນເວລານັ້ນຈະຕິດຕາມຄຳແນະນຳຂອງເພິ່ນ ແລະ ປະຕິບັດຕາມວິທີແຫ່ງການກັບໃຈຂອງພຣະເຢຊູເຈົ້າ. ໂປໂລບໍ່ໄດ້ເວົ້າວ່າທຸກຄຣິສຕະຈັກ ບໍ່ວ່າໃນອະດີດ ຫຼື ໃນອະນາຄົດຕ້ອງກິນ ແລະ ດື່ມທຸກສິ່ງທີ່ເພິ່ນຂຽນຂຶ້ນ ຫຼື ເພິ່ນບໍ່ໄດ້ເວົ້າວ່າ ຄຳເວົ້າຂອງເພິ່ນທຸກຄຳແມ່ນມາຈາກພຣະເຈົ້າ. ຕາມສະພາບການຂອງຄຣິສຕະຈັກໃນເວລານັ້ນ, ເພິ່ນພຽງແຕ່ສົນທະນາກັບອ້າຍເອື້ອຍນ້ອງ ແລະ ຕັກເຕືອນພວກເຂົາ ແລະ ກໍ່ໃຫ້ເກີດຄວາມເຊື່ອໃນພວກເຂົາ ແລະ ເພິ່ນພຽງແຕ່ເທດສະໜາ ຫຼື ເຕືອນຜູ້ຄົນ ແລະ ຕັກເຕືອນພວກເຂົາ. ຄຳເວົ້າຂອງເພິ່ນແມ່ນອີງຕາມພາລະຂອງເພິ່ນເອງ ແລະ ເພິ່ນສິ່ງເສີມຜູ້ຄົນຜ່ານທາງຄຳເວົ້າເຫຼົ່ານີ້. ເພິ່ນປະຕິບັດພາລະກິດຂອງອັກຄະສາວົກໃນຄຣິສຕະຈັກໃນເວລານັ້ນ, ເພິ່ນເປັນເພື່ອນຮ່ວມງານທີ່ຖືກໃຊ້ໂດຍພຣະເຢຊູເຈົ້າ ແລະ ດ້ວຍເຫດນັ້ນ ເພິ່ນຈຶ່ງຕ້ອງຮັບເອົາໜ້າທີ່ສຳລັບຄຣິສຕະຈັກ ແລະ ຕ້ອງດຳເນີນພາລະກິດໃນຄຣິສຕະຈັກ, ເພິ່ນຕ້ອງຮຽນຮູ້ກ່ຽວກັບສະພາວະຕ່າງໆຂອງອ້າຍເອື້ອຍນ້ອງ ແລະ ຍ້ອນສິ່ງນີ້ ເພິ່ນຈຶ່ງຂຽນຈົດໝາຍຂຶ້ນໃຫ້ກັບອ້າຍເອື້ອຍນ້ອງຜູ້ທີ່ຮັບໃຊ້ພຣະຜູ້ເປັນເຈົ້າທຸກຄົນ. ທຸກສິ່ງທີ່ເພິ່ນກ່າວຕໍ່ຜູ້ຄົນ ເຊິ່ງເປັນການສັ່ງສອນ ແລະ ຄວາມຄິດບວກ ແມ່ນສິ່ງທີ່ຖືກຕ້ອງແລ້ວ ແຕ່ມັນບໍ່ໄດ້ເປັນຕົວແທນໃຫ້ກັບຖ້ອຍຄຳຂອງພຣະວິນຍານບໍລິສຸດ ແລະ ມັນບໍ່ສາມາດເປັນຕົວແທນໃຫ້ກັບ

ພຣະເຈົ້າໄດ້. ມັນຄືຄວາມເຂົ້າໃຈທີ່ຊົ່ວຮ້າຍ ແລະ ການໝິ່ນປະໝາດທີ່ໃຫຍ່ຫຼວງ ທີ່ຜູ້ຄົນຈະເຫັນການບັນທຶກກ່ຽວກັບປະສົບການຂອງມະນຸດ ແລະ ຈົດໝາຍຂອງມະນຸດເປັນພຣະທຳທີ່ພຣະວິນຍານບໍລິສຸດກ່າວຕໍ່ຄຣິສຕະຈັກ! ນັ້ນເປັນສິ່ງທີ່ຖືກຕ້ອງ ໂດຍສະເພາະເມື່ອເວົ້າເຖິງຈົດໝາຍທີ່ໂປໂລຂຽນຂຶ້ນສຳລັບຄຣິສຕະຈັກ, ຍ້ອນຈົດໝາຍຂອງເພິ່ນຖືກຂຽນຂຶ້ນສຳລັບອ້າຍເອື້ອຍນ້ອງ ໂດຍອີງຕາມສະພາບການ ແລະ ສະຖານະການຂອງແຕ່ລະຄຣິສຕະຈັກໃນເວລານັ້ນ ແລະ ເພື່ອທີ່ຈະຕັກເຕືອນອ້າຍເອື້ອຍນ້ອງຂອງພຣະຜູ້ເປັນເຈົ້າ ເພື່ອພວກເຂົາຈະສາມາດຮັບພຣະຄຸນຂອງພຣະເຢຊູເຈົ້າ. ຈົດໝາຍຂອງເພິ່ນແມ່ນເພື່ອຈູງໃຈອ້າຍເອື້ອຍນ້ອງໃນເວລານັ້ນ. ສາມາດເວົ້າໄດ້ວ່າ ສິ່ງນີ້ເປັນພາລະກິດຂອງເພິ່ນເອງ ແລະ ຍັງເປັນພາລະທີ່ພຣະວິນຍານບໍລິສຸດມອບໃຫ້ເພິ່ນ; ຢ່າງໃດກໍຕາມ, ເພິ່ນກໍເປັນອັກຄະສາວົກທີ່ນຳພາຄຣິສຕະຈັກໃນເວລານັ້ນ ຜູ້ເຊິ່ງຂຽນຈົດໝາຍຂຶ້ນສຳລັບຄຣິສຕະຈັກ ແລະຕັກເຕືອນພວກເຂົາ, ນັ້ນຄືໜ້າທີ່ຂອງເພິ່ນ. ຕົວຕົນຂອງເພິ່ນເປັນພຽງແຕ່ຕົວຕົນຂອງອັກຄະສາວົກທີ່ປະຕິບັດພາລະກິດ ແລະ ເພິ່ນເປັນພຽງອັກຄະສາວົກທີ່ຖືກພຣະເຈົ້າສົ່ງມາ; ເພິ່ນບໍ່ແມ່ນຜູ້ປະກາດພຣະທຳ ຫຼື ເປັນຜູ້ທຳນາຍ. ສຳລັບເພິ່ນແລ້ວ, ພາລະກິດຂອງເພິ່ນເອງ ແລະ ຊີວິດຂອງອ້າຍເອື້ອຍນ້ອງເປັນສິ່ງທີ່ສຳຄັນທີ່ສຸດ. ສະນັ້ນ ເພິ່ນຈຶ່ງບໍ່ສາມາດກ່າວແທນພຣະວິນຍານບໍລິສຸດໄດ້. ຄຳເວົ້າຂອງເພິ່ນບໍ່ແມ່ນພຣະທຳຂອງພຣະວິນຍານບໍລິສຸດແລ້ວແຮງໄກທີ່ຈະເວົ້າວ່າ ພຣະທຳເຫຼົ່ານັ້ນແມ່ນພຣະທຳຂອງພຣະເຈົ້າ, ນັ້ນກໍຍ້ອນວ່າ ໂປໂລບໍ່ໄດ້ເປັນຫຍັງຫຼາຍໄປກວ່າສິ່ງຊົງສ້າງຂອງພຣະເຈົ້າ ແລະ ເພິ່ນບໍ່ແມ່ນການບັງເກີດເປັນມະນຸດຂອງພຣະເຈົ້າຢ່າງແນ່ນອນ. ຕົວຕົນຂອງເພິ່ນບໍ່ຄືກັບຕົວຕົນຂອງພຣະເຢຊູ. ພຣະທຳຂອງພຣະເຢຊູແມ່ນພຣະທຳຂອງພຣະວິນຍານບໍລິສຸດ, ພຣະທຳດັ່ງກ່າວຄືພຣະທຳຂອງພຣະເຈົ້າ, ຍ້ອນຕົວຕົນຂອງພຣະອົງຄືຕົວຕົນຂອງພຣະຄຣິດ ເຊິ່ງເປັນພຣະບຸດຂອງພຣະເຈົ້າ. ໂປໂລຈະສາມາດເທົ່າທຽມກັບພຣະອົງໄດ້ແນວໃດ? ຖ້າຜູ້ຄົນເຫັນຈົດໝາຍ ຫຼື ຄຳເວົ້າຂອງໂປໂລເປັນຖ້ອຍຄຳຂອງພຣະວິນຍານບໍລິສຸດ ແລະ ບູຊາສິ່ງເຫຼົ່ານັ້ນໃຫ້ເປັນພຣະເຈົ້າ, ສາມາດເວົ້າໄດ້ພຽງຄຳດຽວວ່າ ພວກເຂົາບໍ່ຮູ້ຈັກແຍກແຍະເລີຍ. ຖ້າຈະເວົ້າໃຫ້ແຮງກວ່ານັ້ນ, ສິ່ງນີ້ບໍ່ແມ່ນພຽງການໝິ່ນປະໝາດບໍ? ມະນຸດຈະສາມາດເວົ້າແທນພຣະເຈົ້າໄດ້ແນວໃດ? ຜູ້ຄົນສາມາດຂາບກົ້ມລົງຕໍ່ໜ້າບົດບັນທຶກຂອງເພິ່ນ ແລະຄຳເວົ້າທີ່ເພິ່ນເວົ້າ ຄືກັບວ່າສິ່ງເຫຼົ່ານັ້ນເປັນໜັງສືສັກສິດ ຫຼື ເປັນໜັງສືຈາກສະຫວັນໄດ້ແນວໃດ? ມະນຸດສາມາດກ່າວພຣະທຳຂອງພຣະເຈົ້າໄດ້ງ່າຍດາຍແບບນັ້ນແທ້ບໍ? ມະນຸດຈະສາມາດເວົ້າແທນພຣະເຈົ້າໄດ້ແນວໃດ? ແລ້ວເຈົ້າເດຄິດແນວໃດ, ຈົດໝາຍທີ່ເພິ່ນຂຽນຂຶ້ນສຳລັບຄຣິສຕະຈັກຈະບໍ່ຖືກເປິເປື້ອນໄປດ້ວຍຄວາມຄິດຂອງເພິ່ນເອງບໍ? ພວກມັນບໍ່ຖືກເປິເປື້ອນໄປດ້ວຍຄວາມຄິດຂອງມະນຸດບໍ? ເພິ່ນຂຽນຈົດໝາຍສຳລັບຄຣິສຕະຈັກ ໂດຍອີງຕາມປະສົບການສ່ວນຕົວຂອງເພິ່ນ ແລະ ຄວາມຮູ້ຂອງເພິ່ນ. ຕົວຢ່າງຄື ໂປໂລຂຽນຈົດໝາຍສະບັບໜຶ່ງກ່ຽວກັບຄຣິສຕະຈັກທີ່ກາລາເຕຍ ເຊິ່ງປະກອບມີຄວາມຄິດເຫັນບາງຢ່າງ ແລະ ເປໂຕຂຽນຈົດໝາຍອີກສະບັບ ເຊິ່ງກໍມີມຸມມອງອີກດ້ານໜຶ່ງ. ແມ່ນໃຜໃນພວກເຂົາທີ່ມາຈາກພຣະວິນຍານບໍວິສຸດ? ບໍ່ມີໃຜສາມາດເວົ້າໄດ້ຢ່າງແນ່ນອນ. ສະນັ້ນ ຈຶ່ງພຽງແຕ່ສາມາດເວົ້າໄດ້ວ່າ ພວກເຂົາທັງສອງແບກພາລະໃຫ້ກັບຄຣິສຕະຈັກ ແຕ່ຈົດໝາຍຂອງພວກເຂົາ

ສະແດງເຖິງວຸດທິພາວະຂອງພວກເຂົາ, ພວກເຂົາສະແດງເຖິງການຈັດກຽມ ແລະ ສິ່ງເສີມທີ່ພວກເຂົາມີຕໍ່ອ້າຍເອື້ອຍນ້ອງ ແລະ ພາລະທີ່ພວກເຂົາມີຕໍ່ຄຣິສຕະຈັກ ແລະ ພວກເຂົາພຽງແຕ່ສະແດງໃຫ້ເຫັນເຖິງພາລະກິດຂອງມະນຸດ, ພວກເຂົາບໍ່ໄດ້ມາຈາກພຣະວິນຍານບໍລິສຸດທັງໝົດ. ຖ້າເຈົ້າເວົ້າວ່າ ຈົດໝາຍຂອງເພິ່ນແມ່ນພຣະທຳຂອງພຣະວິນຍານບໍລິສຸດ, ເຈົ້າກໍບໍ່ສົມເຫດສົມຜົນ ແລະ ເຈົ້າກຳລັງເຮັດຜິດດ້ວຍການໝິ່ນປະໝາດ! ຈົດໝາຍຂອງໂປໂລ ແລະ ຈົດໝາຍອື່ນໆໃນພຣະສັນຍາໃໝ່ແມ່ນທຽບເທົ່າກັບຊີວະປະຫວັດຂອງບຸກຄົນຝ່າຍວິນຍານເມື່ອບໍ່ດົນມານີ້: ພວກມັນທຽບເທົ່າກັບໜັງສືຂອງວອສແມນນີ່ ຫຼື ປະສົບການຂອງລໍເຮັນ ແລະ ອື່ນໆອີກ. ງ່າຍໆກໍຄືໜັງສືຂອງບຸກຄົນຝ່າຍວິນຍານເມື່ອບໍ່ດົນມານີ້ບໍ່ໄດ້ຖືກຮວບຮວມເຂົ້າໃນພຣະສັນຍາໃໝ່ ແຕ່ແກ່ນແທ້ຂອງຜູ້ຄົນເຫຼົ່ານີ້ແມ່ນເໝືອນກັນ ນັ້ນກໍຄື ພວກເຂົາເປັນຄົນທີ່ພຣະວິນຍານບໍລິສຸດໄດ້ນຳໃຊ້ໃນໄລຍະເວລາໃດໜຶ່ງ ແລະ ພວກເຂົາບໍ່ໄດ້ເປັນຕົວແທນຂອງພຣະເຈົ້າໂດຍກົງ.

ຂ່າວປະເສີດຂອງມັດທາຍ ແລະ ພຣະສັນຍາໃໝ່ບັນທຶກປະຫວັດວົງຕະກູນຂອງພຣະເຢຊູ. ໃນຕອນເລີ່ມຕົ້ນນັ້ນ, ມັນກ່າວວ່າ ພຣະເຢຊູເປັນເຊື້ອສາຍຂອງອັບຣາຮາມ ແລະ ເດວິດ ແລະ ເປັນລູກຊາຍຂອງໂຢເຊບ; ຕໍ່ມາ ມັນລະບຸວ່າ ພຣະເຢຊູໄດ້ປະຕິສົນທິໂດຍພຣະວິນຍານບໍລິສຸດ ແລະ ເກີດຈາກຍິງພົມມະຈັນ ເຊິ່ງໝາຍຄວາມວ່າ ພຣະອົງບໍ່ແມ່ລູກຊາຍຂອງໂຢເຊບ ຫຼື ເຊື້ອສາຍຂອງອັບຣາຮາມ ແລະ ເດວິດ. ເຖິງຢ່າງໃດກໍຕາມ, ປະຫວັດວົງຕະກູນໄດ້ຢືນຢັນວ່າ ພຣະເຢຊູແມ່ນກ່ຽວຂ້ອງກັບໂຢເຊບ. ແລ້ວຕໍ່ມາພັດບັນທຶກຂັ້ນຕອນການກຳເນີດຂອງພຣະເຢຊູວ່າ ພຣະເຢຊູໄດ້ປະຕິສົນທິໂດຍພຣະວິນຍານບໍລິສຸດ, ພຣະອົງໄດ້ຊົງກຳເນີດຈາກຍິງພົມມະຈັນ ແລະ ບໍ່ແມ່ນລູກຊາຍຂອງໂຢເຊບ. ເຖິງຢ່າງໃດກໍຕາມ ໄດ້ມີການກ່າວໄວ້ຢ່າງຊັດເຈນໃນປະຫວັດວົງຕະກູນວ່າ ພຣະເຢຊູເປັນລູກຊາຍຂອງໂຢເຊບ ແລະ ຍ້ອນປະຫວັດວົງຕະກູນຖືກຂຽນຂຶ້ນສຳລັບພຣະເຢຊູ, ມັນຈຶ່ງໄດ້ບັນທຶກເຖິງສີ່ສິບສອງລຸ້ນຄົນ. ເມື່ອມາເຖິງຮຸ່ນຂອງໂຢເຊບ, ມັນກໍໄດ້ເວົ້າຢ່າງຮີບດ່ວນວ່າ ໂຢເຊບເປັນສາມີຂອງມາຣີອາ ເຊິ່ງເປັນຄຳເວົ້າທີ່ເວົ້າອອກເພື່ອພິສູດວ່າພຣະເຢຊູເປັນເຊື້ອສາຍຂອງອັບຣາຮາມ. ສິ່ງນີ້ບໍ່ແມ່ນຂໍ້ໂຕ້ແຍ້ງບໍ? ປະຫວັດວົງຕະກູນບັນທຶກວົງຕະກູນຂອງໂຢເຊບຢ່າງຊັດເຈນ, ມັນເປັນປະຫວັດວົງຕະກູນຂອງໂຢເຊບຢ່າງຈະແຈ້ງ, ແຕ່ມັດທາຍຢືນຢັນວ່າ ມັນເປັນປະຫວັດວົງຕະກູນຂອງພຣະເຢຊູ. ສິ່ງນີ້ບໍ່ໄດ້ປະຕິເສດຄວາມຈິງທີ່ວ່າ ພຣະເຢຊູໄດ້ປະຕິສົນທິໂດຍພຣະວິນຍານບໍລິສຸດບໍ? ສະນັ້ນ ປະຫວັດວົງຕະກູນທີ່ຂຽນໂດຍມັດທາຍບໍ່ແມ່ນຄວາມຄິດຂອງມະນຸດບໍ? ມັນຊ່າງເປັນຕາຢາກຫົວແທ້ໆ! ນີ້ແມ່ນວິທີທີ່ເຈົ້າສາມາດຮູ້ຈັກວ່າໜັງສືເຫຼັ້ມນີ້ບໍ່ໄດ້ມາຈາກພຣະວິນຍານບໍລິສຸດທັງໝົດ. ບາງເທື່ອ ມີບາງຄົນທີ່ຄິດວ່າ ພຣະເຈົ້າຕ້ອງມີປະຫວັດວົງຕະກູນເທິງແຜ່ນດິນໂລກ, ເຊິ່ງຜົນຕາມມາກໍຄື ພວກເຂົາກຳນົດໃຫ້ພຣະເຢຊູເປັນເຊື້ອສາຍລຸ້ນທີສີ່ສິບສອງຂອງອັບຣາຮາມ. ເຫດຜົນນີ້ກໍຊ່າງເປັນຕາຢາກຫົວແທ້ເດ! ຫຼັງຈາກທີ່ມາເຖິງແຜ່ນດິນໂລກ, ພຣະເຈົ້າຈະມີປະຫວັດວົງຕະກູນໄດ້ແນວໃດ? ຖ້າເຈົ້າເວົ້າວ່າ ພຣະເຈົ້າມີປະຫວັດວົງຕະກູນ, ແລ້ວເຈົ້າບໍ່ແມ່ນຈັດພຣະອົງຢູ່ໃນລະດັບທ່າມກາງສິ່ງຊົງສ້າງຂອງພຣະເຈົ້າບໍ? ຍ້ອນພຣະເຈົ້າບໍ່ໄດ້ມາຈາກແຜ່ນດິນໂລກ, ພຣະອົງເປັນພຣະຜູ້ເປັນເຈົ້າຂອງການຊົງສ້າງ

ແລະ ເຖິງແມ່ນວ່າ ພຣະອົງມີເນື້ອໜັງ, ພຣະອົງກໍ່ບໍ່ໄດ້ມີທາດແທ້ຄືກັບມະນຸດ. ເຈົ້າຈະຈັດລະດັບພຣະເຈົ້າໃຫ້ເປັນປະເພດດຽວກັນກັບສິ່ງຊົງສ້າງຂອງພຣະເຈົ້າໄດ້ແນວໃດ? ອັບຣາຮາມບໍ່ໄດ້ຄືກັບພຣະເຈົ້າ; ເພິ່ນເປັນເຄື່ອງມືຂອງພາລະກິດຂອງພຣະເຢໂຮວາໃນເວລານັ້ນ, ເພິ່ນເປັນພຽງຜູ້ຮັບໃຊ້ທີ່ຊື່ສັດ ຂອງພຣະເຢໂຮວາ ແລະ ເພິ່ນເປັນໜຶ່ງໃນປະຊາຊົນຂອງອິດສະຣາເອນ. ເພິ່ນຈະສາມາດເປັນບັນພະບຸລຸດຂອງພຣະເຢຊູໄດ້ແນວໃດ?

ແມ່ນໃຜທີ່ຂຽນປະຫວັດວົງຕະກູນຂອງພຣະເຢຊູ? ພຣະເຢຊູຂຽນດ້ວຍຕົວພຣະອົງເອງບໍ? ພຣະເຢຊູບອກພວກເຂົາດ້ວຍຕົວພຣະອົງເອງວ່າ "ຈົ່ງຂຽນປະຫວັດວົງຕະກູນຂອງເຮົາ" ບໍ? ມັນຖືກຂຽນຂຶ້ນໂດຍມັດທາຍ ຫຼັງຈາກທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນ. ໃນເວລານັ້ນ, ພຣະເຢຊູໄດ້ສຳເລັດພາລະກິດຫຼາຍຢ່າງ ເຊິ່ງສາວົກຂອງພຣະອົງບໍ່ສາມາດເຂົ້າໃຈໄດ້ ແລະ ພຣະອົງກໍບໍ່ໄດ້ອະທິບາຍເພີ່ມເຕີມໃຫ້ກັບພວກເຂົາເຂົ້າໃຈ. ຫຼັງຈາກທີ່ພຣະອົງຈາກໄປ, ສາວົກກໍເລີ່ມຕົ້ນເທດສະໜາ ແລະປະຕິບັດພາລະກິດຢູ່ທຸກບ່ອນ ແລະ ເພື່ອເຫັນແກ່ພາລະກິດຂັ້ນຕອນນັ້ນ, ພວກເຂົາກໍເລີ່ມຕົ້ນຂຽນຈົດໝາຍ ແລະ ໜັງສືແຫ່ງຂ່າວປະເສີດຂຶ້ນ. ໜັງສືແຫ່ງຂ່າວປະເສີດໃນພຣະສັນຍາໃໝ່ຖືກບັນທຶກຊາວຫາສາມສິບປີຫຼັງຈາກທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນ. ກ່ອນໜ້ານັ້ນ ປະຊາຊົນອິດສະຣາເອນພຽງແຕ່ອ່ານພຣະສັນຍາເດີມ. ນັ້ນໝາຍຄວາມວ່າ ໃນຕອນເລີ່ມຕົ້ນຂອງຍຸກແຫ່ງພຣະຄຸນ, ຜູ້ຄົນອ່ານພຣະສັນຍາເດີມ. ພຣະສັນຍາໃໝ່ພຽງແຕ່ປາກົດຂຶ້ນໃນລະຫວ່າງຍຸກແຫ່ງພຣະຄຸນເທົ່ານັ້ນ. ພຣະສັນຍາໃໝ່ບໍ່ໄດ້ມີຢູ່ໃນຕອນທີ່ພຣະເຢຊູປະຕິບັດພາລະກິດ; ຫຼັງຈາກທີ່ພຣະອົງຖືກເຮັດໃຫ້ຟື້ນຄືນມາ ແລະສະເດັດຂຶ້ນສູ່ສະຫວັນ, ຜູ້ຄົນບັນທຶກພາລະກິດຂອງພຣະອົງ. ຫຼັງຈາກນັ້ນ ຈຶ່ງມີໜັງສືຂ່າວປະເສີດທັງສີ່ເພີ່ມເຕີມໃສ່ຈົດໝາຍຕ່າງໆຂອງໂປໂລ ແລະ ເປໂຕ ພ້ອມທັງໜັງສືພຣະນິມິດ. ຫຼາຍກວ່າສາມຮ້ອຍປີຫຼັງຈາກທີ່ພຣະເຢຊູຊົງສະເດັດຂຶ້ນສູ່ສະຫວັນ, ເມື່ອຜູ້ຄົນລຸ້ນຕໍ່ມາໄດ້ຈັດລຽນເອກະສານເຫຼົ່ານີ້ຢ່າງພິຖີພິຖັນ ແລະ ມີແຕ່ເມື່ອນັ້ນຈຶ່ງມີພາກພຣະສັນຍາໃໝ່ຂອງພຣະຄຳພີ. ພຽງແຕ່ຫຼັງຈາກທີ່ພາລະກິດນີ້ໄດ້ສຳເລັດລົງ ຈຶ່ງມີພຣະສັນຍາໃໝ່; ມັນບໍ່ໄດ້ມີຢູ່ກ່ອນໜ້ານີ້. ພຣະເຈົ້າໄດ້ກະທຳພາລະກິດນັ້ນທັງໝົດແລະ ອັກຄະສາວົກໂປໂລ ແລະ ອັກຄະສາວົກຄົນອື່ນໆໄດ້ຂຽນຈົດໝາຍຫຼາຍສະບັບເຖິງຄຣິສຕະຈັກທີ່ຢູ່ສະຖານທີ່ແຕກຕ່າງກັນ. ຜູ້ຄົນຫຼັງຈາກພວກເຂົາກໍລວມຈົດໝາຍຂອງພວກເຂົາ ແລະ ເພີ່ມເຕີມນິມິດທີ່ຍິ່ງໃຫຍ່ທີ່ສຸດ ເຊິ່ງຖືກບັນທຶກໂດຍໂຢຮັນໃນເກາະປັດໂມ ເຊິ່ງຖືກທຳນາຍເຖິງພາລະກິດຂອງພຣະເຈົ້າ. ຜູ້ຄົນຈັດແຈງລຳດັບນີ້ ເຊິ່ງແຕກຕ່າງຈາກຖ້ອຍຄຳໃນປັດຈຸບັນນີ້. ສິ່ງທີ່ຖືກບັນທຶກໃນປັດຈຸບັນແມ່ນອີງຕາມບາດກ້າວພາລະກິດຂອງພຣະເຈົ້າ; ສິ່ງທີ່ຜູ້ຄົນມີສ່ວນຮ່ວມໃນປັດຈຸບັນແມ່ນພາລະກິດທີ່ພຣະເຈົ້າກະທຳດ້ວຍຕົວພຣະອົງເອງ ແລະ ເປັນພຣະທຳທີ່ພຣະອົງກ່າວດ້ວຍຕົວພຣະອົງເອງ. ເຈົ້າ ທີ່ເປັນມະນຸດຊາດ ບໍ່ຈຳເປັນຕ້ອງແຊກແຊງ; ພຣະທຳເຫຼົ່ານັ້ນ ເຊິ່ງມາຈາກພຣະວິນຍານບໍລິສຸດໂດຍກົງ ຖືກຈັດແຈງເປັນຂັ້ນເປັນຕອນ ແລະ ແຕກຕ່າງຈາກການຈັດແຈງຂອງການບັນທຶກຂອງມະນຸດ. ສາມາດເວົ້າໄດ້ວ່າ ສິ່ງທີ່ພວກເຂົາບັນທຶກນັ້ນແມ່ນຕາມລະດັບການສຶກສາຂອງພວກເຂົາແລະ ຄວາມສາມາດຂອງມະນຸດ. ສິ່ງທີ່ພວກເຂົາບັນທຶກແມ່ນປະສົບການຂອງມະນຸດ ແລະ ແຕ່ລະຄົນ

ກໍມີວິທີການບັນທຶກ ແລະ ບັນທຶກໃນຮູບແບບສະຕິປັນຍາຂອງພວກເຂົາເອງ ແລະ ການບັນທຶກແຕ່ລະຢ່າງກໍແຕກຕ່າງກັນ. ສະນັ້ນ ຖ້າເຈົ້ານະມັດສະການພຣະຄຳພີເໝືອນພຣະເຈົ້າ, ເຈົ້າແມ່ນຂາດສະຕິປັນຍາ ແລະ ໂງ່ຈ້າເປັນຢ່າງຍິ່ງ! ເປັນຫຍັງເຈົ້າຈຶ່ງບໍ່ສະແຫວງຫາພາລະກິດຂອງພຣະເຈົ້າໃນປັດຈຸບັນ? ມີພຽງພາລະກິດຂອງພຣະເຈົ້າທີ່ສາມາດຊ່ວຍມະນຸດໄດ້. ພຣະຄຳພີບໍ່ສາມາດຊ່ວຍມະນຸດໄດ້, ຜູ້ຄົນສາມາດອ່ານພຣະຄຳພີເປັນເວລາຫຼາຍພັນປີ ແລະ ຍັງບໍ່ມີການປ່ຽນແປງແມ່ນແຕ່ໜ້ອຍດຽວໃນຕົວພວກເຂົາ ແລະ ຖ້າເຈົ້ານະມັດສະການພຣະຄຳພີ, ເຈົ້າຈະບໍ່ໄດ້ຮັບພາລະກິດຂອງພຣະວິນຍານອີກຕໍ່ໄປ. ພາລະກິດສອງຂັ້ນຕອນຂອງພຣະເຈົ້າໃນອິດສະຣາເອນແມ່ນຖືກບັນທຶກໃນພຣະຄຳພີ ແລະດ້ວຍເຫດນັ້ນ ໃນການບັນທຶກເຫຼົ່ານີ້ ຊື່ຕ່າງໆຈຶ່ງເປັນຂອງອິດສະຣາເອນ ແລະ ເຫດການຕ່າງໆກໍຢູ່ໃນອິດສະຣາເອນ; ແມ່ນແຕ່ ພຣະນາມ "ພຣະເຢຊູ" ກໍເປັນຊື່ຂອງຊາວອິດສະຣາເອນ. ຖ້າເຈົ້າສືບຕໍ່ອ່ານພຣະຄຳພີໃນປັດຈຸບັນ, ແລ້ວເຈົ້າບໍ່ໄດ້ປະຕິບັດຕາມທຳນຽມບໍ? ສິ່ງທີ່ຖືກບັນທຶກໃນພຣະສັນຍາໃໝ່ໃນພຣະຄຳພີແມ່ນເລື່ອງໃນຢູດາຍ. ບົດຄວາມຕົ້ນສະບັບແມ່ນມີທັງພາສາເກຣກ ແລະ ພາສາເຮັບເລີ ແລະ ພຣະນາມຕ່າງໆທີ່ພຣະອົງຖືກເອີ້ນ ແລະ ພຣະທຳຂອງພຣະເຢຊູໃນເວລານັ້ນກໍເປັນພາສາມະນຸດທັງໝົດ. ເມື່ອພຣະອົງຖືກຄຶງທີ່ໄມ້ກາງແຂນ, ພຣະເຢຊູກ່າວວ່າ "ພຣະເຈົ້າຂອງຂ້ານ້ອຍ ພຣະເຈົ້າຂອງຂ້ານ້ອຍ ເປັນຫຍັງພຣະອົງຈຶ່ງປະຖິ້ມຂ້ານ້ອຍ?" ນີ້ບໍ່ແມ່ນພາສາເຮັບເລີບໍ? ງ່າຍໆກໍຍ້ອນວ່າ ພຣະເຢຊູຊົງບັງເກີດເປັນມະນຸດໃນຢູດາຍ ແຕ່ນັ້ນກໍບໍ່ໄດ້ພິສູດວ່າ ພຣະເຈົ້າເປັນຊາວຢິວ. ໃນປັດຈຸບັນ, ພຣະເຈົ້າໄດ້ກາຍມາເປັນເນື້ອໜັງໃນປະເທດຈີນ ແລ້ວທຸກສິ່ງທີ່ພຣະອົງຊົງກ່າວກໍເປັນພາສາຈີນໂດຍບໍ່ຕ້ອງສົງໄສເລີຍ. ແຕ່ມັນບໍ່ສາມາດປຽບທຽບກັບພາສາຈີນທີ່ແປມາຈາກພຣະຄຳພີ, ຍ້ອນແຫຼ່ງທີ່ມາຂອງຄຳເວົ້າເຫຼົ່ານີ້ແມ່ນແຕກຕ່າງກັນ ນັ້ນກໍຄື: ຢ່າງໜຶ່ງແມ່ນມາຈາກພາສາເຮັບເລີທີ່ຖືກບັນທຶກໂດຍມະນຸດ ແລະ ອີກຢ່າງແມ່ນມາຈາກຖ້ອຍຄຳຂອງພຣະວິນຍານໂດຍກົງ. ມັນບໍ່ມີຄວາມແຕກຕ່າງໄດ້ຢ່າງໃດເລີຍ?

# ກ່ຽວກັບພຣະຄຳພີ (4)

ຫຼາຍຄົນເຊື່ອວ່າ ການເຂົ້າໃຈ ແລະ ການສາມາດຕີຄວາມໝາຍພຣະຄຳພີໄດ້ນັ້ນ ແມ່ນຄືກັບການຄົ້ນພົບຫົນທາງທີ່ແທ້ຈິງ, ແຕ່ໃນຄວາມເປັນຈິງແລ້ວ ທຸກສິ່ງທຸກຢ່າງງ່າຍດາຍແບບນັ້ນແທ້ບໍ? ບໍ່ມີໃຜຮູ້ຈັກຄວາມເປັນຈິງແຫ່ງພຣະຄຳພີ ເຊິ່ງບໍ່ມີຫຍັງຫຼາຍນອກຈາກການບັນທຶກທາງປະຫວັດສາດຂອງພາລະກິດຂອງພຣະເຈົ້າ ແລະ ເປັນຫຼັກຖານພິສູດໃຫ້ກັບພາລະກິດສອງຂັ້ນຕອນທີ່ຜ່ານມາຂອງພຣະເຈົ້າ ແລະ ມັນບໍ່ໄດ້ເຮັດໃຫ້ເຈົ້າເຂົ້າໃຈສິ່ງໃດເລີຍກ່ຽວກັບຈຸດປະສົງຂອງພາລະກິດຂອງພຣະເຈົ້າ. ທຸກຄົນທີ່ໄດ້ອ່ານພຣະຄຳພີຮູ້ຈັກວ່າ ພຣະຄຳພີບັນທຶກພາລະກິດສອງຂັ້ນຕອນຂອງພຣະເຈົ້າໃນລະຫວ່າງຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນ. ພຣະສັນຍາເດີມບັນທຶກເຫດການປະຫວັດສາດຂອງອິດສະຣາເອນ ແລະ ພາລະກິດຂອງພຣະເຢໂຮວາຕັ້ງແຕ່ເວລາການຊົງສ້າງຈົນເຖິງເວລາສຸດທ້າຍຂອງຍຸກແຫ່ງພຣະບັນຍັດ. ພຣະສັນຍາໃໝ່ບັນທຶກພາລະກິດຂອງພຣະເຢຊູຢູ່ເທິງແຜ່ນດິນໂລກ ເຊິ່ງກໍຢູ່ໃນພຣະກິດຕິຄຸນທັງສີ່ ພ້ອມທັງພາລະກິດຂອງໂປໂລ, ສິ່ງເຫຼົ່ານີ້ບໍ່ແມ່ນການບັນທຶກທາງປະຫວັດສາດບໍ? ການນຳເອົາສິ່ງທີ່ຢູ່ໃນອະດີດມາເວົ້າເຮັດໃຫ້ພວກມັນກາຍເປັນປະຫວັດສາດ ແລະ ບໍ່ວ່າ ພວກມັນອາດເປັນຈິງ ຫຼື ແທ້ຈິງຫຼາຍສໍ່າໃດກໍຕາມ, ພວກມັນກໍຍັງເປັນປະຫວັດສາດ ແລະ ປະຫວັດສາດບໍ່ສາມາດກ່າວເຖິງປັດຈຸບັນ, ຍ້ອນພຣະເຈົ້າບໍ່ໄດ້ຫັນເບິ່ງທີ່ປະຫວັດສາດ! ເພາະສະນັ້ນ ຖ້າເຈົ້າພຽງແຕ່ເຂົ້າໃຈພຣະຄຳພີເທົ່ານັ້ນ ແລະ ບໍ່ເຂົ້າໃຈຫຍັງເລີຍກ່ຽວກັບພາລະກິດທີ່ພຣະເຈົ້າຕັ້ງໃຈປະຕິບັດໃນປັດຈຸບັນ ແລະ ຖ້າເຈົ້າເຊື່ອໃນພຣະເຈົ້າ ແຕ່ບໍ່ໄດ້ສະແຫວງຫາພາລະກິດຂອງພຣະວິນຍານບໍລິສຸດແລ້ວເຈົ້າກໍບໍ່ເຂົ້າໃຈວ່າ ການສະແຫວງຫາພຣະເຈົ້າໝາຍເຖິງຫຍັງ. ຖ້າເຈົ້າອ່ານພຣະຄຳພີເພື່ອສຶກສາປະຫວັດສາດຂອງອິດສະຣາເອນ, ເພື່ອຄົ້ນຄວ້າປະຫວັດສາດຂອງການຊົງສ້າງສະຫວັນ ແລະ ແຜ່ນດິນໂລກຂອງພຣະເຈົ້າ ແລ້ວເຈົ້າກໍບໍ່ໄດ້ເຊື່ອໃນພຣະເຈົ້າ. ແຕ່ໃນປັດຈຸບັນ, ຍ້ອນເຈົ້າເຊື່ອໃນພຣະເຈົ້າ ແລະ ສະແຫວງຫາຊີວິດ, ຍ້ອນເຈົ້າສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ບໍ່ໄດ້ສະແຫວງຫາຕົວອັກສອນ ແລະ ຄຳສັ່ງສອນທີ່ຕາຍໄປແລ້ວ ຫຼື ການເຂົ້າໃຈປະຫວັດສາດ, ເຈົ້າຕ້ອງສະແຫວງຫາຄວາມປະສົງຂອງພຣະເຈົ້າແຫ່ງປັດຈຸບັນ ແລະ ເຈົ້າຕ້ອງຊອກຫາທິດທາງຂອງພາລະກິດຂອງພຣະວິນຍານບໍລິສຸດ. ຖ້າເຈົ້າເປັນນັກບູຮານຄະດີ ເຈົ້າສາມາດອ່ານພຣະຄຳພີ, ແຕ່ເຈົ້າບໍ່ແມ່ນ, ເຈົ້າເປັນໜຶ່ງໃນກຸ່ມຄົນທີ່ເຊື່ອໃນພຣະເຈົ້າ ແລະ ທາງທີ່ດີເຈົ້າຄວນສະແຫວງຫາຄວາມປະສົງຂອງພຣະເຈົ້າແຫ່ງປັດຈຸບັນ. ການອ່ານພຣະຄຳພີ, ສ່ວນໃຫຍ່ເຈົ້າຈະເຂົ້າໃຈແຕ່ປະຫວັດສາດຂອງອິດສະຣາເອນພຽງເລັກນ້ອຍ, ເຈົ້າຈະຮຽນຮູ້ກ່ຽວກັບຊີວິດຂອງອັບຣາຮາມ, ດາວິດ ແລະ ໂມເຊ, ເຈົ້າອາດຈະຄົ້ນພົບວ່າ ພວກເຂົາຢຳເກງພຣະເຢໂຮວາແນວໃດ, ພຣະເຢໂຮວາຊົງເຜົາຄົນທີ່ຕໍ່ຕ້ານພຣະອົງແນວໃດ ແລະ ພຣະອົງຊົງກ່າວກັບຜູ້ຄົນໃນຍຸກນັ້ນໄດ້ແນວໃດ. ເຈົ້າຈະໄດ້ແຕ່ຄົ້ນພົບພາລະກິດຂອງພຣະເຈົ້າໃນອະດີດເທົ່ານັ້ນ. ການບັນທຶກຂອງພຣະຄຳພີກ່ຽວຂ້ອງກັບວິທີທີ່ປະຊາຊົນຂອງອິດສະຣາເອນໃນໄລຍະຕົ້ນຢຳເກງພຣະເຈົ້າ ແລະ ຢູ່ພາຍໃຕ້ການນຳຂອງພຣະເຢໂຮວາ. ເພາະວ່າຊາວອິດສະຣາເອນເປັນ

ຜູ້ຄົນທີ່ພຣະເຈົ້າຊົງເລືອກໄວ້, ໃນພຣະສັນຍາເດີມ ເຈົ້າສາມາດເຫັນເຖິງຄວາມຊື່ສັດທີ່ຜູ້ຄົນທັງໝົດມີໃຫ້ກັບພຣະເຢໂຮວາ, ທຸກຄົນທີ່ເຊື່ອຟັງພຣະເຢໂຮວາໄດ້ຮັບການດູແລ ແລະ ການອວຍພອນຈາກພຣະອົງແນວໃດ; ເຈົ້າສາມາດຮຽນຮູ້ວ່າ ເມື່ອພຣະເຈົ້າປະຕິບັດພາລະກິດໃນອິດສະຣາເອນ, ພຣະອົງເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກ ພ້ອມທັງປະກອບດ້ວຍໄຟທີ່ໄໝ້ທຳລາຍ ແລະ ທຸກສິ່ງທີ່ກ່ຽວຂ້ອງກັບຊາວອິດສະຣາເອນທຸກຄົນ ຕັ້ງແຕ່ຄົນທີ່ຕ້ອຍຕໍ່າຈົນເຖິງຄົນທີ່ຍິ່ງໃຫຍ່ ຢຳເກງພຣະເຈົ້າ ແລະ ດ້ວຍເຫດນັ້ນ ທົ່ວປະເທດຈຶ່ງໄດ້ຮັບພອນຈາກພຣະເຈົ້າ. ສິ່ງດັ່ງກ່າວແມ່ນປະຫວັດສາດຂອງອິດສະຣາເອນທີ່ບັນທຶກໃນພຣະສັນຍາເດີມ.

ພຣະຄຳພີເປັນການບັນທຶກທາງປະຫວັດສາດກ່ຽວກັບພາລະກິດຂອງພຣະເຈົ້າໃນອິດສະຣາເອນ ແລະ ບັນທຶກການທຳນາຍຫຼາຍຢ່າງຂອງນັກປະກາດພຣະທຳບູຮານ ພ້ອມທັງຖ້ອຍຄຳບາງຢ່າງຂອງພຣະເຢໂຮວາໃນການປະຕິບັດພາລະກິດຂອງພຣະອົງໃນເວລານັ້ນ. ສະນັ້ນ, ທຸກຄົນຈຶ່ງຄິດວ່າໜັງສືເຫຼັ້ມນີ້ເປັນສິ່ງທີ່ສັກສິດ (ຍ້ອນພຣະເຈົ້າສັກສິດ ແລະ ຍິ່ງໃຫຍ່). ແນ່ນອນ, ທັງໝົດນີ້ຄືຜົນຂອງການຢຳເກງພຣະເຢໂຮວາ ແລະ ການທີ່ພວກເຂົາເຄົາລົບບູຊາພຣະເຈົ້າ. ຜູ້ຄົນກ່າວເຖິງໜັງສືເຫຼັ້ມນີ້ໃນລັກສະນະແບບນີ້ກໍຍ້ອນການເນລະມິດສ້າງຂອງພຣະເຈົ້າເຄົາລົບ ແລະ ບູຊາພຣະຜູ້ສ້າງຂອງພວກເຂົາຫຼາຍ ແລະ ຍັງມີຜູ້ຄົນເຖິງກັບເອີ້ນໜັງສືເຫຼັ້ມນີ້ວ່າເປັນໜັງສືຈາກສະຫວັນ. ຕາມຄວາມຈິງແລ້ວມັນເປັນພຽງການບັນທຶກຂອງມະນຸດເທົ່ານັ້ນ. ພຣະເຢໂຮວາບໍ່ໄດ້ຕັ້ງຊື່ມັນດ້ວຍພຣະອົງເອງ ຫຼື ພຣະເຢໂຮວາບໍ່ໄດ້ນຳພາການຈັດສ້າງມັນຂຶ້ນມາດ້ວຍຕົວພຣະອົງເອງ. ເວົ້າອີກແບບໜຶ່ງກໍຄື ຜູ້ຂຽນໜັງສືເຫຼັ້ມນີ້ບໍ່ແມ່ນພຣະເຈົ້າ ແຕ່ເປັນມະນຸດ. ພຣະຄຳພີສັກສິດເປັນພຽງຊື່ທີ່ເປັນຕາເຄົາລົບ ເຊິ່ງມະນຸດເປັນຜູ້ແຕ່ງຕັ້ງໃຫ້ກັບມັນ. ຊື່ພຣະຄຳພີບໍ່ໄດ້ຖືກຕັດສິນແຕ່ງຕັ້ງຈາກການສົນທະນາລະຫວ່າງພຣະເຢໂຮວາ ແລະ ພຣະເຢຊູ; ມັນເປັນພຽງຄວາມຄິດຂອງມະນຸດ. ຍ້ອນວ່າໜັງສືເຫຼັ້ມນີ້ບໍ່ໄດ້ຖືກຂຽນຂຶ້ນໂດຍພຣະເຢໂຮວາ ແລ້ວຍິ່ງໄກທີ່ພຣະເຢຊູຈະຂຽນມັນຂຶ້ນມາ. ກົງກັນຂ້າມ, ມັນເປັນເລື່ອງລາວທີ່ບອກເລົ່າໂດຍຜູ້ປະກາດພຣະທຳບູຮານ, ພວກອັກຄະສາວົກ ແລະ ນັກທຳນາຍຫຼາຍຄົນ ເຊິ່ງຖືກຮວບຮວມໂດຍຄົນລຸ້ນຕໍ່ມາ ໃຫ້ເປັນໜັງສືແຫ່ງບົດຂຽນບູຮານ; ເບິ່ງຄືກັບວ່າສັກສິດສຳລັບຜູ້ຄົນ, ເປັນໜັງສືທີ່ພວກເຂົາເຊື່ອວ່າ ປະກອບມີຂໍ້ລຶກລັບຫຼາຍຢ່າງທີ່ເລິກເຊິ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້ ເຊິ່ງລໍຖ້າໃຫ້ຖືກເປີດເຜີຍໂດຍຜູ້ຄົນໃນອະນາຄົດ. ເມື່ອເປັນດັ່ງນັ້ນ ຜູ້ຄົນກໍຍິ່ງຖືກຊັກຊວນໃຫ້ເຊື່ອວ່າ ໜັງສືເຫຼັ້ມນີ້ແມ່ນໜັງສືທີ່ມາຈາກສະຫວັນ. ດ້ວຍມີການເພີ່ມເຕີມພຣະກິດຕິຄຸນທັງສີ່ ແລະ ໜັງສືພຣະນິມິດ, ທ່າທີຂອງຜູ້ຄົນກ່ຽວກັບພຣະຄຳພີຈຶ່ງແຕກຕ່າງຈາກໜັງສືເຫຼັ້ມອື່ນໆ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ມີໃຜທີ່ກ້າວິເຄາະ "ໜັງສືທີ່ມາຈາກສະຫວັນ" ນີ້ ເພາະວ່າມັນ "ສັກສິດ" ເກີນໄປ.

ທັນທີທີ່ພວກເຂົາອ່ານພຣະຄຳພີ ເປັນຫຍັງຜູ້ຄົນຈຶ່ງສາມາດຄົ້ນພົບເສັ້ນທາງທີ່ເໝາະສົມໃນການປະຕິບັດມັນ? ເປັນຫຍັງພວກເຂົາຈຶ່ງສາມາດຮັບຫຼາຍສິ່ງທີ່ພວກເຂົາບໍ່ສາມາດເຂົ້າໃຈໄດ້? ມື້ນີ້ ເຮົາວິເຄາະພຣະຄຳພີໃນລັກສະນະນີ້ ບໍ່ໄດ້ໝາຍຄວາມວ່າ ເຮົາຊັງມັນ ຫຼື ມັນປະຕິເສດຄຸນຄ່າສຳລັບການໃຊ້ເປັນບ່ອນອ້າງອີງ. ເຮົາກຳລັງອະທິບາຍ ແລະ ເຮັດໃຫ້ຊັດເຈນຂຶ້ນກ່ຽວກັບຄຸນຄ່າທີ່ແທ້ຈິງ

ແລະ ຕົ້ນກຳເນີດຂອງພຣະຄຳພີໃຫ້ກັບເຈົ້າ ເພື່ອຢຸດເຈົ້າບໍ່ໃຫ້ຕົກຢູ່ໃນຄວາມມືດ. ຍ້ອນຜູ້ຄົນມີຫຼາຍມຸມມອງກ່ຽວກັບພຣະຄຳພີ ແລະ ມຸມມອງສ່ວນຫຼາຍແມ່ນຜິດ; ການອ່ານພຣະຄຳພີໃນລັກສະນະນີ້ບໍ່ພຽງແຕ່ຂັດຂວາງພວກເຂົາຈາກການໄດ້ຮັບໃນສິ່ງທີ່ພວກເຂົາຄວນໄດ້ຮັບ ແຕ່ສຳຄັນໄປກວ່ານັ້ນກໍຄືມັນຂັດຂວາງພາລະກິດທີ່ເຮົາຕັ້ງໃຈກະທຳ. ມັນແຊກແຊງພາລະກິດແຫ່ງອະນາຄົດຢ່າງຫຼວງຫຼາຍ ແລະມີແຕ່ຂໍ້ເສຍຫາຍ ບໍ່ມີຂໍ້ດີ. ເຖິງຢ່າງໃດກໍຕາມ ສິ່ງທີ່ເຮົາກຳລັງສັ່ງສອນເຈົ້າແມ່ນເປັນພຽງແກ່ນແທ້ ແລະ ເລື່ອງລາວພາຍໃນພຣະຄຳພີເທົ່ານັ້ນ. ເຮົາບໍ່ໄດ້ບອກໃຫ້ເຈົ້າບໍ່ຕ້ອງອ່ານພຣະຄຳພີ ຫຼື ໃຫ້ເຈົ້າປ່າວປະກາດວ່າ ພຣະຄຳພີປາສະຈາກຄຸນຄ່າ, ມີພຽງແຕ່ເພື່ອໃຫ້ເຈົ້າມີຄວາມຮູ້ ແລະ ມຸມມອງທີ່ຖືກຕ້ອງກ່ຽວກັບພຣະຄຳພີ. ຢ່າເປັນຄົນລຳອຽງເກີນໄປ! ເຖິງແມ່ນພຣະຄຳພີເປັນໜັງສືທາງປະຫວັດສາດທີ່ຖືກຂຽນຂຶ້ນໂດຍມະນຸດ, ມັນກໍຍັງບັນທຶກຫຼັກການຫຼາຍຢ່າງທີ່ທຳມິກກະຊົນ ແລະ ນັກປະກາດພຣະທຳບູຮານໄດ້ຮັບໃຊ້ພຣະເຈົ້າ ພ້ອມທັງປະສົບການເມື່ອບໍ່ດົນມານີ້ຂອງພວກອັກຄະສາວົກໃນການຮັບໃຊ້ພຣະເຈົ້າ ເຊິ່ງເປັນສິ່ງທີ່ຄົນເຫຼົ່ານີ້ເຫັນ ແລະ ຮູ້ຈັກຢ່າງແທ້ຈິງ ແລະ ສາມາດໃຊ້ເປັນບ່ອນອ້າງອີງໃຫ້ກັບຜູ້ຄົນໃນຍຸກນີ້ເພື່ອສະແຫວງຫາຫົນທາງທີ່ແທ້ຈິງ. ສະນັ້ນ, ໃນການອ່ານພຣະຄຳພີນັ້ນ ຜູ້ຄົນສາມາດຮັບຫົນທາງແຫ່ງຊີວິດຫຼາຍຢ່າງເຊັ່ນກັນ ເຊິ່ງບໍ່ສາມາດຄົ້ນພົບໃນໜັງສືອື່ນໆ. ຫົນທາງເຫຼົ່ານີ້ແມ່ນຫົນທາງແຫ່ງຊີວິດຂອງພາລະກິດຂອງພຣະວິນຍານບໍລິສຸດ ທີ່ຜູ້ປະກາດພຣະທຳ ແລະພວກອັກຄະສາວົກໃນຍຸກອະດີດໄດ້ປະສົບ ແລະ ພຣະທຳຫຼາຍຂໍ້ແມ່ນມີຄ່າ ແລະ ສາມາດສະໜອງສິ່ງທີ່ຜູ້ຄົນຕ້ອງການ. ດ້ວຍເຫດນັ້ນ ທຸກຄົນຈຶ່ງມັກອ່ານພຣະຄຳພີ. ຍ້ອນມີຫຼາຍຢ່າງທີ່ລີ້ລັບຢູ່ໃນພຣະຄຳພີ, ມຸມມອງຂອງຜູ້ຄົນກ່ຽວກັບພຣະຄຳພີຈຶ່ງບໍ່ຄືກັບມຸມມອງທີ່ມີຕໍ່ບົດຂຽນຂອງບຸກຄົນຝ່າຍວິນຍານທີ່ຍິ່ງໃຫຍ່. ພຣະຄຳພີເປັນການບັນທຶກ ແລະ ການຮວບຮວມປະສົບການ ແລະ ຄວາມຮູ້ຂອງຜູ້ຄົນທີ່ຮັບໃຊ້ພຣະເຢໂຮວາ-ພຣະເຢຊູໃນຍຸກເກົ່າ ແລະ ໃໝ່ ແລ້ວຄົນລຸ້ນຕໍ່ມາຈຶ່ງສາມາດຮັບແສງສະຫວ່າງ, ແສງເຍືອງທາງ ແລະ ເສັ້ນທາງປະຕິບັດຢ່າງຫຼວງຫຼາຍຈາກພຣະຄຳພີ. ເຫດຜົນທີ່ວ່າເປັນຫຍັງພຣະຄຳພີຈຶ່ງສູງສົ່ງກວ່າບົດຂຽນຂອງບຸກຄົນຝ່າຍວິນຍານທີ່ຍິ່ງໃຫຍ່ອື່ນໆນັ້ນ ກໍເພາະວ່າບົດຂຽນຂອງພວກເຂົາທັງໝົດແມ່ນຖືກຖອດຖອນມາຈາກພຣະຄຳພີ, ປະສົບການຂອງພວກເຂົາກໍມາຈາກພຣະຄຳພີທັງໝົດ ແລະ ພວກເຂົາທັງໝົດກໍອະທິບາຍພຣະຄຳພີ. ສະນັ້ນເຖິງແມ່ນວ່າ ຜູ້ຄົນຈະສາມາດໄດ້ຮັບການຕອບສະໜອງຈາກໜັງສືຂອງບຸກຄົນຝ່າຍວິນຍານທີ່ຍິ່ງໃຫຍ່ກໍຕາມ ພວກເຂົາກໍຍັງນະມັດສະການພຣະຄຳພີ ຍ້ອນມັນເບິ່ງຄືສູງສົ່ງ ແລະ ເລິກເຊິ່ງສຳລັບພວກເຂົາ! ເຖິງແມ່ນພຣະຄຳພີຈະນຳເອົາໜັງສືບາງຢ່າງກ່ຽວກັບພຣະທຳແຫ່ງຊີວິດມາລວມກັນ ເຊັ່ນຈົດໝາຍຂອງໂປໂລ ແລະຈົດໝາຍຂອງເປໂຕ ແລະ ເຖິງແມ່ນວ່າຜູ້ຄົນສາມາດໄດ້ຮັບການຕອບສະໜອງ ແລະ ການຊ່ວຍເຫຼືອຈາກໜັງສືເຫຼົ່ານີ້, ໜັງສືເຫຼົ່ານີ້ກໍຍັງຫຼ້າສະໄໝ, ມັນຍັງເປັນໜັງສືຂອງຍຸກເກົ່າ ແລະ ບໍ່ວ່າມັນຈະດີສໍ່າໃດ, ມັນກໍພຽງແຕ່ເໝາະສົມສຳລັບຊ່ວງເວລາໃດໜຶ່ງເທົ່ານັ້ນ ແລະ ບໍ່ໄດ້ຢູ່ຕະຫຼອດໄປເປັນນິດ. ຍ້ອນພາລະກິດຂອງພຣະເຈົ້າພັດທະນາຢູ່ສະເໝີ ແລະ ມັນບໍ່ສາມາດເຊົາຢູ່ໃນຊ່ວງເວລາຂອງໂປໂລແລະ ເປໂຕເທົ່ານັ້ນ ຫຼື ຢຸດຢູ່ໃນຍຸກແຫ່ງພຣະຄຸນ ເຊິ່ງເປັນຍຸກທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນ.

ສະນັ້ນ ໜັງສືເຫຼົ່ານີ້ກໍພຽງແຕ່ເໝາະສົມສຳລັບຍຸກແຫ່ງພຣະຄຸນ ແລະ ບໍ່ແມ່ນສຳລັບຍຸກແຫ່ງອານາຈັກໃນຍຸກສຸດທ້າຍ. ໜັງສືເຫຼົ່ານັ້ນສາມາດພຽງແຕ່ສະໜອງໃຫ້ກັບຜູ້ເຊື່ອໃນຍຸກແຫ່ງພຣະຄຸນ ບໍ່ແມ່ນສຳລັບທຳມິກກະຊົນໃນຍຸກແຫ່ງອານາຈັກ ແລະ ບໍ່ວ່າມັນຈະດີສໍ່າໃດກໍຕາມ, ມັນກໍຍັງຄົງເປັນໜັງສືທີ່ຫຼ້າສະໄໝ. ບໍ່ຕ່າງຫຍັງກັບພາລະກິດແຫ່ງການຊົງສ້າງຂອງພຣະເຢໂຮວາ ຫຼື ພາລະກິດຂອງພຣະອົງໃນອິດສະຣາເອນ ນັ້ນກໍຄື ບໍ່ວ່າພາລະກິດນີ້ຈະດີສໍ່າໃດກໍຕາມ, ມັນກໍ່ຍັງຫຼ້າສະໄໝ ແລະ ກາຍເປັນອະດີດໄປແລ້ວ. ພາລະກິດຂອງພຣະເຈົ້າກໍເຊັ່ນກັນ: ເປັນພາລະກິດທີ່ຍິ່ງໃຫຍ່ ແຕ່ກໍຈະມີເວລາທີ່ພາລະກິດນັ້ນຕ້ອງສິ້ນສຸດລົງ; ມັນບໍ່ສາມາດຄົງຢູ່ຕະຫຼອດໄປໃນທ່າມກາງພາລະກິແຫ່ງການຊົງສ້າງໄດ້ ຫຼື ທ່າມກາງພາລະກິດແຫ່ງການຄຶງທີ່ໄມ້ກາງແຂນ. ບໍ່ວ່າພາລະກິດແຫ່ງການຄຶງທີ່ໄມ້ກາງແຂນນັ້ນຈະເປັນຕາເຊື່ອຫຼາຍສໍ່າໃດກໍຕາມ, ບໍ່ວ່າມັນຈະມີປະສິດຕິພາບໃນການເອົາຊະນະຊາຕານຫຼາຍສໍ່າໃດ, ໃນທີ່ສຸດ ພາລະກິດກໍຍັງເປັນພາລະກິດ ແລະ ໃນທີ່ສຸດ ຍຸກກໍຍັງເປັນຍຸກຄືເກົ່າ; ພາລະກິດບໍ່ສາມາດຢູ່ເທິງພື້ນຖານເດີມໄດ້ຕະຫຼອດໄປ ຫຼື ເວລາບໍ່ສາມາດປ່ຽນແປງໄດ້ຈັກເທື່ອ ເພາະວ່າ ເມື່ອມີການຊົງສ້າງກໍຕ້ອງມີຍຸກສິ້ນສຸດ. ສິ່ງນີ້ຫຼີກເວັ້ນບໍ່ໄດ້! ສະນັ້ນ ໃນປັດຈຸບັນ ພຣະທຳແຫ່ງຊີວິດໃນພຣະສັນຍາໃໝ່ນັ້ນກໍຄື ຈົດໝາຍຂອງພວກອັກຄະສາວົກ ແລະ ພຣະກິດຕິຄຸນທັງສີ່ ໄດ້ກາຍມາເປັນໜັງສືທາງປະຫວັດສາດໄປແລ້ວ, ພວກມັນໄດ້ກາຍມາເປັນກາລານຸກົມທີ່ເກົ່າແກ່ ແລະ ກາລານຸກົມທີ່ເກົ່າແກ່ນີ້ຈະສາມາດນຳພາຜູ້ຄົນເຂົ້າສູ່ຍຸກໃໝ່ໄດ້ແນວໃດ? ບໍ່ວ່າກາລານຸກົມເຫຼົ່ານີ້ຈະສາມາດສະໜອງຊີວິດໃຫ້ກັບຜູ້ຄົນ ຫຼື ບໍ, ບໍ່ວ່າພວກມັນຈະສາມາດນຳຜູ້ຄົນໄປສູ່ໄມ້ກາງແຂນໄດ້ ຫຼື ບໍ, ພວກມັນບໍ່ຫຼ້າສະໄໝບໍ? ພວກມັນບໍ່ໄດ້ສູນເສຍຄຸນຄ່າແລ້ວບໍ? ສະນັ້ນ ເຮົາບອກໃຫ້ເຈົ້າບໍ່ຄວນເຊື່ອໃນກາລານຸກົມເຫຼົ່ານີ້ຢ່າງຕາບອດ. ພວກມັນເກົ່າແກ່ເກີນໄປ, ພວກມັນບໍ່ສາມາດນຳເຈົ້າເຂົ້າສູ່ພາລະກິດໃໝ່ໄດ້ ແລະ ພວກມັນຈະເປັນພຽງພາລະໃຫ້ກັບເຈົ້າ. ບໍ່ແມ່ນແຕ່ພວກມັນບໍ່ສາມາດນຳເຈົ້າເຂົ້າສູ່ພາລະກິດໃໝ່ ແລະ ເຂົ້າສູ່ທາງເຂົ້າໃໝ່ເທົ່ານັ້ນ, ແຕ່ພວກມັນຈະນຳເຈົ້າເຂົ້າສູ່ຄຣິສຕະຈັກແຫ່ງສາສະໜາທີ່ເກົ່າແກ່ ແລະ ຖ້າມັນເປັນແບບນັ້ນ ເຈົ້າບໍ່ໄດ້ກຳລັງຖອຍຫຼັງໃນຄວາມເຊື່ອທີ່ເຈົ້າມີຕໍ່ພຣະເຈົ້າບໍ?

ສິ່ງທີ່ພຣະຄຳພີບັນທຶກແມ່ນພາລະກິດຂອງພຣະເຈົ້າໃນອິດສະຣາເອນ ລວມເຖິງບາງສິ່ງທີ່ປະຊາຊົນອິດສະຣາເອນຜູ້ທີ່ພຣະເຈົ້າຊົງເລືອກໄວ້ ໄດ້ກະທຳ. ເຖິງແມ່ນວ່າ ໄດ້ມີການຄັດເລືອກບາງສ່ວນໃຫ້ປະກອບເຂົ້າ ຫຼື ຕັດອອກ, ເຖິງແມ່ນວ່າພຣະວິນຍານບໍລິສຸດບໍ່ເຫັນດີດ້ວຍກໍຕາມ, ແຕ່ພຣະອົງກໍບໍ່ໄດ້ກ່າວໂທດ. ພຣະຄຳພີຄືໜັງສືປະຫວັດສາດຂອງອິດສະຣາເອນແທ້ໆ ເຊິ່ງເປັນປະຫວັດສາດຂອງພາລະກິດຂອງພຣະເຈົ້າອີກດ້ວຍ. ຜູ້ຄົນ, ເຫດການ ແລະ ສິ່ງຕ່າງໆທີ່ມັນໄດ້ບັນທຶກໄວ້ແມ່ນເປັນຈິງທັງໝົດ ແລະ ບໍ່ມີສິ່ງໃດກ່ຽວກັບພວກເຂົາທີ່ມີຄວາມໝາຍທາງສັນຍາລັກ, ແນ່ນອນ ນອກຈາກຄຳທຳນາຍຂອງເອຊາຢາ, ດານີເອນ ແລະ ຜູ້ປະກາດພຣະທຳອື່ນໆ ຫຼື ໜັງສືແຫ່ງນິມິດຂອງໂຢຮັນ. ປະຊາຊົນຂອງອິດສະຣາເອນໃນໄລຍະເລີ່ມຕົ້ນນັ້ນມີຄວາມຮູ້ ແລະ ມີວັດທະນະທຳ ແລະ ຄວາມຮູ້ ແລະ ວັດທະນະທຳທີ່ເກົ່າແກ່ຂອງພວກເຂົາກໍກ້າວໜ້າພໍສົມຄວນ ແລ້ວສິ່ງທີ່ພວກເຂົາຂຽນກໍ່ສູງສົ່ງກວ່າຜູ້ຄົນໃນປັດຈຸບັນຂຽນ. ຜົນຕາມມາກໍຄື ພວກເຂົາສາມາດຂຽນໜັງສືເຫຼົ່ານີ້ໄດ້ ກໍບໍ່ເຫັນເປັນ

ເລື່ອງແປກ ຍ້ອນວ່າ ພຣະເຢໂຮວາໄດ້ປະຕິບັດພາລະກິດຫຼາຍຢ່າງທ່າມກາງພວກເຂົາ ແລະ ພວກເຂົາກໍໄດ້ເຫັນຫຼາຍສິ່ງຫຼາຍຢ່າງ. ເດວິດໄດ້ເຫັນການກະທຳຂອງພຣະເຢໂຮວາດ້ວຍຕາຂອງເພິ່ນເອງ, ເພິ່ນໄດ້ປະສົບກັບພວກມັນເປັນການສ່ວນຕົວ ແລະ ໄດ້ເຫັນໝາຍສຳຄັນ ແລະ ອັດສະຈັນຫຼາຍຢ່າງ ດ້ວຍເຫດນັ້ນ ເພິ່ນຈຶ່ງຂຽນເພງສັນລະເສີນເຫຼົ່ານັ້ນເພື່ອສັນລະເສີນການກະທຳຂອງພຣະເຢໂຮວາ. ພວກເຂົາສາມາດຂຽນໜັງສືເຫຼົ່ານີ້ພາຍໃຕ້ສະພາບການບາງຢ່າງ ບໍ່ແມ່ນຍ້ອນພວກເຂົາມີພອນສະຫວັນທີ່ພິເສດ. ພວກເຂົາສັນລະເສີນພຣະເຢໂຮວາ ຍ້ອນພວກເຂົາໄດ້ເຫັນພຣະອົງ. ຖ້າພວກເຈົ້າບໍ່ໄດ້ເຫັນພຣະເຢໂຮວາ ແລະ ບໍ່ຮູ້ກ່ຽວກັບການເປັນຢູ່ຂອງພຣະອົງ, ພວກເຈົ້າຈະສັນລະເສີນພຣະອົງໄດ້ແນວໃດ? ຖ້າພວກເຈົ້າບໍ່ໄດ້ເຫັນພຣະເຢໂຮວາ ພວກເຈົ້າຈະບໍ່ຮູ້ສັນລະເສີນພຣະອົງ ຫຼື ນະມັດສະການພຣະອົງ ຢ່າວ່າແຕ່ພວກເຈົ້າຈະສາມາດຂຽນບົດເພງຍົກຍ້ອງພຣະອົງເລີຍ ແລະ ເຖິງແມ່ນວ່າ ພວກເຈົ້າຖືກຮຽກຮ້ອງໃຫ້ປະດິດການກະທຳບາງຢ່າງຂອງພຣະເຢໂຮວາ ພວກເຈົ້າກໍຈະບໍ່ສາມາດເຮັດໄດ້. ໃນປັດຈຸບັນ ພວກເຈົ້າສາມາດສັນລະເສີນພຣະເຈົ້າ ແລະ ຮັກພຣະເຈົ້າກໍຍ້ອນວ່າ ພວກເຈົ້າໄດ້ເຫັນພຣະອົງເຊັ່ນກັນ ແລະ ໄດ້ພະເຊີນກັບພາລະກິດຂອງພຣະອົງເຊັ່ນກັນ ແລະ ຖ້າຄວາມສາມາດຂອງພວກເຈົ້າປັບປຸງຂຶ້ນ, ພວກເຈົ້າຈະບໍ່ສາມາດຂຽນບົດກອນເພື່ອສັນລະເສີນພຣະເຈົ້າຄືກັບເດວິດບໍ?

ເຂົ້າໃຈພຣະຄຳພີ, ເຂົ້າໃຈປະຫວັດສາດ ແຕ່ບໍ່ຍອມເຂົ້າໃຈສິ່ງທີ່ພຣະວິນຍານບໍລິສຸດກຳລັງກະທຳໃນປັດຈຸບັນ, ນັ້ນຄືສິ່ງທີ່ຜິດ! ເຈົ້າໄດ້ເຮັດດີຫຼາຍໃນການສຶກສາກ່ຽວກັບປະຫວັດສາດ, ເຈົ້າເຮັດດີທີ່ສຸດ ແຕ່ເຈົ້າບໍ່ເຂົ້າໃຈຫຍັງເລີຍກ່ຽວກັບພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນປັດຈຸບັນ. ສິ່ງນີ້ບໍ່ແມ່ນຄວາມໂງ່ຈ້າບໍ? ຄົນອື່ນຖາມເຈົ້າວ່າ "ພຣະເຈົ້າເປັນແນວໃດໃນປັດຈຸບັນ? ເຈົ້າຄວນເຂົ້າສູ່ຫຍັງໃນປັດຈຸບັນ? ການສະແຫວງຫາຊີວິດຂອງເຈົ້າເປັນແນວໃດ? ເຈົ້າເຂົ້າໃຈຄວາມປະສົງຂອງພຣະເຈົ້າບໍ?" ເຈົ້າກໍຈະບໍ່ມີຄຳຕອບສຳລັບສິ່ງທີ່ພວກເຂົາຖາມ ແລ້ວເຈົ້າຮູ້ຈັກຫຍັງແດ່? ເຈົ້າຈະເວົ້າວ່າ ຂ້ານ້ອຍຮູ້ພຽງແຕ່ວ່າ ຂ້ານ້ອຍຕ້ອງຫັນຫຼັງໃຫ້ກັບເນື້ອໜັງ ແລະ ຮູ້ຈັກຕົວຂ້ານ້ອຍເອງ. ແລ້ວຖ້າພວກເຂົາຖາມວ່າ "ເຈົ້າຮູ້ຈັກຫຍັງອີກແດ່?" ເຈົ້າຈະເວົ້າວ່າ ເຈົ້າຍັງຮູ້ຈັກເຊື່ອຟັງການຈັດແຈງຂອງພຣະເຈົ້າທັງໝົດ ແລະ ເຈົ້າເຂົ້າໃຈປະຫວັດສາດກ່ຽວກັບພຣະຄຳພີເລັກນ້ອຍ ແລະ ໝົດເທົ່ານັ້ນ. ນັ້ນຄືທຸກສິ່ງທີ່ເຈົ້າໄດ້ຮັບຈາກການເຊື່ອໃນພຣະເຈົ້າຕະຫຼອດເວລາຫຼາຍປີຜ່ານມາບໍ? ຖ້ານັ້ນຄືທັງໝົດທີ່ເຈົ້າເຂົ້າໃຈ ແລ້ວເຈົ້າແມ່ນຂາດເຂີນຫຼາຍ. ສະນັ້ນ, ແທ້ຈິງແລ້ວ ວຸດທິພາວະຂອງພວກເຈົ້າໃນປັດຈຸບັນບໍ່ສາມາດບັນລຸສິ່ງທີ່ເຮົາຕ້ອງການຈາກພວກເຈົ້າ ແລະ ຄວາມຈິງທີ່ພວກເຈົ້າເຂົ້າໃຈກໍບໍ່ພຽງພໍ ພ້ອມກັບລິດອຳນາດແຫ່ງການຈຳແນກຂອງພວກເຈົ້າ ເຊິ່ງໝາຍຄວາມວ່າ ຄວາມເຊື່ອຂອງພວກເຈົ້າເລັກນ້ອຍເກີນໄປ! ພວກເຈົ້າຕ້ອງປະກອບດ້ວຍຄວາມຈິງຫຼາຍຂຶ້ນ, ພວກເຈົ້າຕ້ອງການຄວາມຮູ້ຫຼາຍຂຶ້ນ, ພວກເຈົ້າຕ້ອງເຫັນຫຼາຍກວ່ານີ້ ແລະ ມີພຽງເມື່ອນັ້ນ ພວກເຈົ້າຈຶ່ງຈະສາມາດເຜີຍແຜ່ຂ່າວປະເສີດ ເພາະວ່າ ນີ້ຄືສິ່ງທີ່ພວກເຈົ້າຄວນບັນລຸ!

# ການປະຕິບັດ (1)

ໃນອະດີດ, ມີການອອກນອກຮູ້ນອກທາງຫຼາຍຢ່າງ ແລະ ເຖິງກັບມີຄວາມບໍ່ສົມເຫດສົມຜົນໃນວິທີທີ່ຜູ້ຄົນໄດ້ຜະເຊີນ. ພວກເຂົາບໍ່ເຂົ້າໃຈມາດຕະຖານໃນເງື່ອນໄຂຂອງພຣະເຈົ້າແທ້ໆ, ສະນັ້ນຈຶ່ງມີຫຼາຍຂົງເຂດທີ່ປະສົບການຂອງຜູ້ຄົນເກີດຜິດພາດ. ສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດກໍຄືການໃຫ້ພວກເຂົາສາມາດດຳລົງຊີວິດຕາມຄວາມເປັນມະນຸດປົກກະຕິ. ຕົວຢ່າງເຊັ່ນ ມັນຖືກຕ້ອງແລ້ວທີ່ຜູ້ຄົນປະຕິບັດຕາມທຳນຽມສະໄໝໃໝ່ໃນເລື່ອງຂອງອາຫານ ແລະ ເຄື່ອງນຸ່ງຫົ່ມ, ນຸ່ງຊຸດ ແລະ ກາລະຫວັດ, ຮຽນຮູ້ເລັກໆນ້ອຍໆກ່ຽວກັບສິລະປະສະໄໝໃໝ່ ແລະ ທີ່ພວກເຂົາຈະມີຄວາມສຸກກັບສິລະປະ, ວັດທະນະທຳ ແລະ ການບັນເທີງໃນເວລາຫວ່າງຂອງພວກເຂົາ. ພວກເຂົາສາມາດຖ່າຍຮູບບາງຮູບເພື່ອທີ່ລະລຶກ, ພວກເຂົາສາມາດອ່ານ ແລະ ຮັບເອົາຄວາມຮູ້ບາງຢ່າງທີ່ມີປະໂຫຍດ ແລະ ສາມາດມີສະພາບແວດລ້ອມການເປັນຢູ່ທີ່ດີ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ສົມຄວນແກ່ຊີວິດແຫ່ງຄວາມເປັນມະນຸດປົກກະຕິ, ແຕ່ຜູ້ຄົນເຫັນສິ່ງເຫຼົ່ານັ້ນເປັນສິ່ງທີ່ພຣະເຈົ້າລັງກຽດ ແລະ ພວກເຂົາກໍຫັກຫ້າມຕົນເອງບໍ່ໃຫ້ເຮັດສິ່ງເຫຼົ່ານັ້ນ. ການປະຕິບັດຂອງພວກເຂົາປະກອບພຽງການປະຕິບັດຕາມກົດລະບຽບໜ້ອຍດຽວເທົ່ານັ້ນເຊິ່ງນຳໄປສູ່ຊີວິດທີ່ຈືດຈາງຄືກັບນໍ້າທີ່ຢູ່ໃນຮ່ອງ ແລະ ບໍ່ມີຄວາມໝາຍໃດທັງສິ້ນ. ຕາມຄວາມຈິງແລ້ວ, ພຣະເຈົ້າບໍ່ເຄີຍຮຽກຮ້ອງໃຫ້ຜູ້ຄົນເຮັດສິ່ງຕ່າງໆໃນລັກສະນະນີ້. ທຸກຄົນປາຖະໜາທີ່ຈະກຳນົດອຸປະນິໄສຂອງພວກເຂົາເອງ, ອະທິຖານພາຍໃນວິນຍານຂອງພວກເຂົາຢ່າງບໍ່ຢຸດຢັ້ງເພື່ອຈະໄດ້ເຂົ້າໃກ້ພຣະເຈົ້າຫຼາຍຂຶ້ນ, ແນວຄິດຂອງພວກເຂົາກໍຄິດຢ່າງຮອບຄອບໃນສິ່ງທີ່ພຣະເຈົ້າເຈດຕະນາຢູ່ຕະຫຼອດເວລາ, ຕາຂອງພວກເຂົາກໍສັງເກດສິ່ງນັ້ນສິ່ງນີ້ຢູ່ສະເໝີ, ໂດຍຢ້ານຢ່າງແຮງວ່າຄວາມສຳພັນຂອງພວກເຂົາກັບພຣະເຈົ້າຈະຖືກຕັດອອກຈາກກັນດ້ວຍວິທີໃດວິທີໜຶ່ງ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຂໍ້ສະຫຼຸບທີ່ຜູ້ຄົນຄິດຂຶ້ນມາເອງ; ພວກມັນຄືກົດລະບຽບທີ່ຜູ້ຄົນກຳນົດໃຫ້ກັບພວກເຂົາເອງ. ຖ້າເຈົ້າບໍ່ຮູ້ຈັກທຳມະຊາດ ແລະ ແກ່ນແທ້ຂອງເຈົ້າເອງ ແລະ ເຈົ້າບໍ່ຮູ້ຈັກວ່າການປະຕິບັດຂອງເຈົ້າເອງຈະສາມາດໄປຮອດລະດັບໃດ, ແລ້ວເຈົ້າກໍຈະບໍ່ມີທາງແນ່ໃຈໄດ້ກ່ຽວກັບມາດຕະຖານທີ່ພຣະເຈົ້າຮຽກຮ້ອງຈາກມະນຸດຢ່າງແນ່ນອນ ແລະ ເຈົ້າກໍຈະບໍ່ມີເສັ້ນທາງແຫ່ງການປະຕິບັດທີ່ຖືກຕ້ອງອີກດ້ວຍ. ຍ້ອນເຈົ້າບໍ່ສາມາດເຂົ້າໃຈວ່າພຣະເຈົ້າຮຽກຮ້ອງຫຍັງຈາກມະນຸດ, ແນວຄິດຂອງເຈົ້າຈຶ່ງກະວົນກະວາຍຢູ່ສະເໝີ, ເຈົ້າຈຶ່ງຄິດຢ່າງໜັກເພື່ອວິເຄາະເຈດຕະນາຂອງພຣະເຈົ້າ ແລະ ງົມຫາວິທີການບາງຢ່າງເພື່ອທີ່ຈະໄດ້ຮັບການດົນບັນດານ ແລະ ການສ່ອງແສງສະຫວ່າງຈາກພຣະວິນຍານບໍລິສຸດ. ຜົນຕາມມາກໍຄື ເຈົ້າມີວິທີການປະຕິບັດບາງຢ່າງທີ່ເຈົ້າເຊື່ອວ່າເໝາະສົມ. ເຈົ້າບໍ່ຮູ້ເລີຍວ່າສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດນັ້ນຄືຫຍັງກັນແທ້; ເຈົ້າພຽງແຕ່ດຳເນີນການປະຕິບັດຂອງເຈົ້າເອງຢ່າງສະໜຸກສະໜານ, ສົນໃຈຜົນຕາມມາພຽງເລັກນ້ອຍ ແລະ ຍິ່ງສົນໃຈໜ້ອຍກ່ຽວກັບການອອກນອກຮູ້ນອກທາງ ຫຼື ຄວາມຜິດພາດໃນການປະຕິບັດຂອງເຈົ້າ. ໃນວິທີນີ້, ການປະຕິບັດຂອງເຈົ້າຂາດຄວາມຖືກຕ້ອງໂດຍທຳມະຊາດ ແລະ ບໍ່ມີຫຼັກການ. ສິ່ງທີ່ຂາດໂດຍສະເພາະກໍຄືເຫດຜົນ ແລະ ຄວາມສຳນຶກທີ່ປົກກະຕິ

ຂອງມະນຸດ ພ້ອມທັງການຍົກຍ້ອງ ແລະ ການຢືນຢັນຂອງພຣະວິນຍານບໍລິສຸດ. ມັນງ່າຍຫຼາຍເກີນໄປທີ່ພຽງແຕ່ເລືອກຫົນທາງຂອງເຈົ້າເອງ. ການປະຕິບັດແບບນີ້ເປັນພຽງແຕ່ການປະຕິບັດຕາມກົດລະບຽບ ຫຼື ເຈດຕະນາຮັບເອົາພາລະຫຼາຍຂຶ້ນ ເພື່ອຍັບຢັ້ງຕົນເອງ ແລະ ຄວບຄຸມຕົນເອງ. ເຖິງຢ່າງໃດກໍຕາມເຈົ້າຄິດວ່າເຈົ້າມີການປະຕິບັດຂອງເຈົ້າທີ່ຖືກຕ້ອງສົມບູນ ໂດຍບໍ່ຮູ້ຈັກວ່າການປະຕິບັດສ່ວນໃຫຍ່ຂອງພວກເຈົ້າປະກອບດ້ວຍຂະບວນການ ຫຼື ການປະຕິບັດຕາມທີ່ບໍ່ຈຳເປັນ. ມີຫຼາຍຄົນທີ່ປະຕິບັດແບບນີ້ເປັນເວລາຫຼາຍປີ ໂດຍພື້ນຖານແລ້ວ ບໍ່ໄດ້ມີການປ່ຽນແປງໃນອຸປະນິໄສຂອງພວກເຂົາ, ບໍ່ມີຄວາມເຂົ້າໃຈໃໝ່ ແລະ ບໍ່ມີທາງເຂົ້າໃໝ່. ພວກເຂົາເຮັດຜິດແບບເດີມໆໂດຍບໍ່ຮູ້ຈັກຕົວ ແລະ ປ່ອຍໃຫ້ເປັນໄປຕາມທຳມະຊາດທີ່ປ່າເຖື່ອນຂອງພວກເຂົາ, ຈົນເຖິງຈຸດທີ່ພວກເຂົາ ຫຼາຍຄັ້ງໄດ້ເຮັດໃນສິ່ງທີ່ບໍ່ສົມເຫດສົມຜົນ ແລະ ໄຮ້ມະນຸດສະທຳ ແລະ ປະພຶດໃນລັກສະນະທີ່ເຮັດໃຫ້ຜູ້ຄົນເກົາຫົວຕົນເອງ ແລະ ສັບສົນໄປໝົດ. ສາມາດເວົ້າໄດ້ບໍວ່າຄົນປະເພດດັ່ງກ່າວໄດ້ຜະເຊີນກັບການປ່ຽນແປງໃນອຸປະນິໄສ?

ບັດນີ້ ຄວາມເຊື່ອໃນພຣະເຈົ້າໄດ້ເຂົ້າສູ່ຍຸກແຫ່ງພຣະທຳຂອງພຣະເຈົ້າ. ເວົ້າຢ່າງປຽບທຽບກໍຄືຜູ້ຄົນບໍ່ອະທິຖານຫຼາຍເທົ່າທີ່ພວກເຂົາເຄີຍເຮັດມາກ່ອນ; ພຣະທຳຂອງພຣະເຈົ້າໄດ້ສື່ສານເຖິງຄວາມຈິງ ແລະ ວິທີການປະຕິບັດໃນທຸກໆດ້ານຢ່າງແຈ່ມແຈ້ງ, ສະນັ້ນຈຶ່ງບໍ່ຈຳເປັນໃຫ້ຜູ້ຄົນສະແຫວງຫາ ແລະ ງົມຫາອີກຕໍ່ໄປ. ໃນຊີວິດຍຸກແຫ່ງອານາຈັກ, ພຣະທຳຂອງພຣະເຈົ້າໄດ້ນຳພາຜູ້ຄົນໄປທາງໜ້າ ແລະ ມັນເປັນຊີວິດທີ່ທຸກສິ່ງຖືກເຮັດໃຫ້ພວກເຂົາເຫັນໄດ້ຢ່າງຊັດເຈນ, ຍ້ອນພຣະເຈົ້າໄດ້ວາງທຸກສິ່ງອອກຢ່າງຊັດເຈນ ແລະ ມະນຸດກໍບໍ່ໄດ້ຖືກປ່ອຍໃຫ້ສຳຜັດຜ່ານຊີວິດອີກຕໍ່ໄປ. ເມື່ອເວົ້າເຖິງການແຕ່ງດອງ, ບັນຫາທາງໂລກ, ຊີວິດ, ອາຫານ, ເສື້ອຜ້າ ແລະ ບ່ອນຫຼັບໃພ, ຄວາມສຳພັນລະຫວ່າງບຸກຄົນ, ວິທີທີ່ຄົນໜຶ່ງສາມາດຮັບໃຊ້ໃນທາງໃດທາງໜຶ່ງເພື່ອບັນລຸຕາມຄວາມປະສົງຂອງພຣະເຈົ້າ, ວິທີທີ່ຄົນໜຶ່ງຄວນປະຖິ້ມເນື້ອໜັງ ແລະ ອື່ນໆອີກ, ເຊິ່ງໃນບັນດາສິ່ງເຫຼົ່ານີ້ ພຣະເຈົ້າບໍ່ໄດ້ອະທິບາຍໃຫ້ກັບພວກເຈົ້າບໍ? ເຈົ້າຍັງຕ້ອງໄປອະທິຖານ ແລະ ສະແຫວງຫາອີກບໍ? ມັນບໍ່ຈຳເປັນແທ້ໆເລີຍ! ຖ້າເຈົ້າຍັງເຮັດສິ່ງເຫຼົ່ານີ້, ເຈົ້າກໍພຽງແຕ່ປະຕິບັດໂດຍບໍ່ຈຳເປັນ. ມັນເປັນສິ່ງທີ່ຂາດຄວາມຮູ້ ແລະ ໂງ່ຈ້າ ແລະ ບໍ່ຈຳເປັນທັງສິ້ນ! ມີແຕ່ຄົນທີ່ຂາດຄວາມສາມາດຫຼາຍທີ່ສຸດ ແລະ ບໍ່ສາມາດເຂົ້າໃຈພຣະທຳຂອງພຣະເຈົ້າເທົ່ານັ້ນຈຶ່ງກ່າວຄຳອະທິຖານທີ່ໂງ່ຈ້າຢ່າງບໍ່ຢຸດຢັ້ງ. ຫົນທາງສຳຄັນໃນການປະຕິບັດຄວາມຈິງກໍຄື ເຈົ້າມີຄວາມເດັດດ່ຽວ ຫຼື ບໍ່. ບາງຄົນຢືນຢັນທີ່ຈະປະຕິບັດຕາມຄວາມຕ້ອງການຝ່າຍເນື້ອໜັງຂອງພວກເຂົາ ແມ່ນແຕ່ເມື່ອພວກເຂົາຮູ້ວ່າມັນບໍ່ໄດ້ສອດຄ່ອງກັບຄວາມຈິງ. ສະນັ້ນ ສິ່ງນີ້ຈຶ່ງຂັດຂວາງຄວາມຄືບໜ້າໃນຊີວິດຂອງພວກເຂົາເອງ ແລະ ແມ່ນແຕ່ຫຼັງຈາກໄດ້ອະທິຖານ ແລະ ສະແຫວງຫາແລ້ວ ພວກເຂົາກໍຍັງຕ້ອງການກະທຳເພື່ອສະແດງຄວາມເຄົາລົບແກ່ເນື້ອໜັງ. ການເຮັດໃນສິ່ງນີ້, ພວກເຂົາບໍ່ແມ່ນກຳລັງເຮັດຜິດບາບໂດຍບໍ່ຮູ້ຕົວບໍ? ຄືກັບຄົນທີ່ສະແຫວງຫາຄວາມສະບາຍທາງເນື້ອໜັງ ແລະ ປາຖະໜາແຕ່ເງິນ ແລະ ຫຼັງຈາກນັ້ນ ອະທິຖານຫາພຣະເຈົ້າວ່າ "ພຣະເຈົ້າເອີຍ! ພຣະອົງຈະຍອມໃຫ້ຂ້ານ້ອຍປາຖະໜາຫາຄວາມສຸກທາງເນື້ອໜັງ ແລະ ປາຖະໜາຫາຄວາມຮັ່ງມີບໍ? ມັນແມ່ນຄວາມປະສົງຂອງພຣະອົງທີ່ໃຫ້ຂ້ານ້ອຍໄດ້ຮັບເງິນໃນລັກສະນະນີ້ບໍ?" ນີ້ຄືວິທີທີ່ເໝາະສົມ

ໃນການອະທິຖານບໍ? ຜູ້ຄົນທີ່ເຮັດສິ່ງນີ້ແມ່ນຮູ້ຈັກເປັນຢ່າງດີວ່າ ພຣະເຈົ້າບໍ່ພໍໃຈໃນສິ່ງເຫຼົ່ານີ້ ແລະ ພວກເຂົາຄວນເຊົາເຮັດສິ່ງເຫຼົ່ານັ້ນ, ແຕ່ສິ່ງຕ່າງໆທີ່ພວກເຂົາມີຢູ່ໃນຫົວໃຈຂອງພວກເຂົາແມ່ນໄດ້ຖືກກຳນົດໄວ້ແລ້ວ ແລະ ເມື່ອພວກເຂົາອະທິຖານ ແລະ ສະແຫວງຫາ ພວກເຂົາແມ່ນກຳລັງພະຍາຍາມບັງຄັບພຣະເຈົ້າຍອມໃຫ້ພວກເຂົາປະພຶດໃນລັກສະນະນີ້. ໃນຫົວໃຈຂອງພວກເຂົາ, ພວກເຂົາເຖິງກັບຮຽກຮ້ອງໃຫ້ພຣະເຈົ້າເວົ້າບາງສິ່ງບາງຢ່າງເພື່ອຢືນຢັນໃນສິ່ງນີ້, ນີ້ແມ່ນສິ່ງທີ່ຖືກເອີ້ນວ່າຄວາມກະບົດ. ຍັງມີຄົນທີ່ນຳເອົາອ້າຍເອື້ອຍນ້ອງໃນຄຣິສຕະຈັກໄປຢູ່ຂ້າງພວກເຂົາ ແລະ ສ້າງຕັ້ງອານາຈັກອິດສະຫຼະຂອງພວກເຂົາເອງ. ເຈົ້າຮູ້ເປັນຢ່າງດີວ່າການກະທຳເຫຼົ່ານີ້ແມ່ນເປັນການຕໍ່ຕ້ານພຣະເຈົ້າ, ແຕ່ຫຼັງຈາກທີ່ເຈົ້າຕັດສິນໃຈເຮັດໃນສິ່ງແບບນີ້ ເຈົ້າກໍຍັງໄປສະແຫວງຫາ ແລະ ອະທິຖານຫາພຣະເຈົ້າຢ່າງໃຈເຢັນ ແລະ ບໍ່ຫວາດຫວັ່ນ. ເຈົ້າຊ່າງບໍ່ມີຢາງອາຍ ແລະ ໜ້າດ້ານແທ້ເດ! ສຳລັບການປະຖິ້ມສິ່ງຕ່າງໆທາງໂລກໄວ້ຂ້າງຫຼັງນັ້ນ, ສິ່ງນີ້ແມ່ນຖືກເວົ້າເຖິງແຕ່ດົນແລ້ວ. ມີບາງຄົນທີ່ຮູ້ຈັກຢ່າງຊັດເຈນວ່າພຣະເຈົ້າກຽດຊັງສິ່ງຕ່າງໆທາງໂລກ, ແຕ່ກໍຍັງອະທິຖານ ໂດຍເວົ້າວ່າ “ໂອ ພຣະເຈົ້າ! ຂ້ານ້ອຍເຂົ້າໃຈວ່າພຣະອົງຈະບໍ່ຍອມໃຫ້ຂ້ານ້ອຍດຳເນີນໄປກັບສິ່ງຕ່າງໆທາງໂລກ, ແຕ່ຂ້ານ້ອຍໄດ້ເຮັດສິ່ງນີ້ເພື່ອບໍ່ໃຫ້ເກີດຄວາມອັບອາຍແກ່ພຣະນາມຂອງພຣະອົງ; ຂ້ານ້ອຍເຮັດສິ່ງນີ້ກໍເພື່ອວ່າຄົນທາງໂລກຈະສາມາດເຫັນສະຫງ່າລາສີຂອງພຣະອົງໃນຕົວຂ້ານ້ອຍ”. ນີ້ແມ່ນຄຳອະທິຖານປະເພດໃດ? ພວກເຈົ້າສາມາດບອກໄດ້ບໍ? ມັນເປັນຄຳອະທິຖານທີ່ມີເຈດຕະນາບັງຄັບ ແລະ ກົດດັນພຣະເຈົ້າ. ເຈົ້າບໍ່ຮູ້ສຶກອັບອາຍໃນການອະທິຖານລັກສະນະນີ້ບໍ? ຜູ້ຄົນທີ່ອະທິຖານໃນລັກສະນະນີ້ແມ່ນຕໍ່ຕ້ານພຣະເຈົ້າໂດຍເຈດຕະນາ ແລະ ຄຳອະທິຖານແບບນີ້ກໍເປັນແຮງຈູງໃຈທີ່ໜ້າສົງໄສທັງໝົດ; ມັນເປັນການສະແດງອອກເຖິງອຸປະນິໄສທີ່ຊົ່ວຮ້າຍຢ່າງແທ້ຈິງ. ພຣະທຳຂອງພຣະເຈົ້າແມ່ນຊັດເຈນຫຼາຍ ໂດຍສະເພາະແລ້ວແມ່ນພຣະທຳທີ່ເວົ້າເຖິງຄວາມປະສົງຂອງພຣະອົງ, ອຸປະນິໄສຂອງພຣະອົງ ແລະ ວິທີທີ່ພຣະອົງປະຕິບັດຕໍ່ຜູ້ຄົນທຸກປະເພດ. ຖ້າເຈົ້າບໍ່ເຂົ້າໃຈຄວາມຈິງ, ແລ້ວເຈົ້າກໍຄວນອ່ານພຣະທຳຂອງພຣະເຈົ້າຫຼາຍຂຶ້ນ, ຜົນໄດ້ຮັບໃນການເຮັດສິ່ງນີ້ແມ່ນດີກວ່າການອະທິຖານ ແລະ ການສະແຫວງຫາແບບຫຼັບຫູຫຼັບຕາຫຼາຍເທົ່າ. ມີຫຼາຍກໍລະນີທີ່ການສະແຫວງຫາ ແລະ ການອະທິຖານຄວນຖືກແທນທີ່ດ້ວຍການອ່ານພຣະທຳຂອງພຣະເຈົ້າຫຼາຍຂຶ້ນ ແລະ ການສົນທະນາກ່ຽວກັບຄວາມຈິງ. ໃນຄຳອະທິຖານໂດຍປົກກະຕິຂອງເຈົ້າ, ເຈົ້າຄວນໄຕ່ຕອງ ແລະ ພະຍາຍາມຮູ້ຈັກຕົນເອງໃຫ້ຫຼາຍຂຶ້ນຈາກພຣະທຳຂອງພຣະເຈົ້າ. ສິ່ງນີ້ເປັນປະໂຫຍດຫຼາຍສຳລັບຄວາມຄືບໜ້າໃນຊີວິດຂອງເຈົ້າ. ຖ້າຕອນນີ້ເຈົ້າຍັງສະແຫວງຫາໂດຍຫຼຽວເບິ່ງສະຫວັນ, ນັ້ນບໍ່ແມ່ນສະແດງໃຫ້ເຫັນວ່າເຈົ້າຍັງເຊື່ອໃນພຣະເຈົ້າທີ່ເລື່ອນລອຍບໍ? ເມື່ອກ່ອນ, ເຈົ້າເຫັນຜົນຈາກການສະແຫວງຫາ ແລະ ການອະທິຖານຂອງເຈົ້າ ແລະ ພຣະວິນຍານບໍລິສຸດກໍດົນບັນດາວິນຍານຂອງເຈົ້າໜ້ອຍໜຶ່ງ ເພາະວ່າ ນັ້ນແມ່ນເວລາຂອງຍຸກແຫ່ງພຣະຄຸນ. ເຈົ້າບໍ່ສາມາດເຫັນພຣະເຈົ້າ, ສະນັ້ນເຈົ້າກໍບໍ່ມີທາງເລືອກ ນອກຈາກດຳເນີນຊີວິດໄປທາງໜ້າ ແລະ ສະແຫວງຫາໃນລັກສະນະນັ້ນ. ບັດນີ້ ພຣະເຈົ້າໄດ້ມາທ່າມກາງມະນຸດ, ພຣະທຳໄດ້ປາກົດໃນເນື້ອໜັງ ແລະ ເຈົ້າກໍໄດ້ເຫັນພຣະເຈົ້າ; ສະນັ້ນ ພຣະວິນຍານບໍລິສຸດແມ່ນບໍ່ໄດ້ປະຕິບັດພາລະກິດຄືກັບທີ່ພຣະອົງປະຕິບັດຜ່ານ

ມາອີກຕໍ່ໄປ. ຍຸກໄດ້ປ່ຽນແປງ ແລະ ດ້ວຍເຫດນັ້ນ ວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດກໍ ປ່ຽນໄປເຊັ່ນດຽວກັນ. ເຖິງແມ່ນຜູ້ຄົນບໍ່ໄດ້ອະທິຖານຫຼາຍສໍ່າກັບພວກເຂົາເຄີຍເຮັດຜ່ານມາ, ຍ້ອນ ພຣະເຈົ້າຢູ່ເທິງແຜ່ນດິນໂລກ ບັດນີ້ ມະນຸດຈຶ່ງມີໂອກາດຮັກພຣະເຈົ້າ. ມະນຸດຊາດໄດ້ເຂົ້າສູ່ຍຸກແຫ່ງ ການຮັກພຣະເຈົ້າ ແລະ ສາມາດຫຍັບເຂົ້າໃກ້ພຣະເຈົ້າຢູ່ພາຍໃນພວກເຂົາຢ່າງເປັນປົກກະຕິ: "ໂອ ພຣະເຈົ້າ! ພຣະອົງປະເສີດຫຼາຍແທ້ໆ ແລະ ຂ້ານ້ອຍກໍປາຖະໜາທີ່ຈະຮັກພຣະອົງ!" ພຽງແຕ່ຄໍາເວົ້າ ສອງສາມຄໍາທີ່ຊັດເຈນ ແລະ ທໍາມະດາກໍສົ່ງສຽງໃຫ້ກັບຄວາມຮັກສໍາລັບພຣະເຈົ້າພາຍໃນຫົວໃຈຂອງ ຜູ້ຄົນ; ຄໍາອະທິຖານນີ້ແມ່ນພຽງແຕ່ຖືກກ່າວເພື່ອເຮັດໃຫ້ຄວາມຮັກລະຫວ່າງມະນຸດກັບພຣະເຈົ້າເລິກ ເຊິ່ງຂຶ້ນເທົ່ານັ້ນ. ບາງເທື່ອ ເຈົ້າອາດເຫັນວ່າຕົນເອງກໍາລັງສະແດງຄວາມກະບົດບາງຢ່າງ ແລະ ເວົ້າວ່າ "ໂອ ພຣະເຈົ້າ! ເປັນຫຍັງຂ້ານ້ອຍຈຶ່ງເສື່ອມຊາມ?" ເຈົ້າຮູ້ສຶກຢ່າງແຮງຢາກຕີຕົນເອງສອງສາມຄັ້ງ ແລະ ນໍ້າຕາກໍຊຶມຢູ່ໃນຕາຂອງເຈົ້າ. ໃນເວລາດັ່ງກ່າວ, ເຈົ້າຮູ້ສຶກເສຍໃຈ ແລະ ໂສກເສົ້າໃນຫົວໃຈ ຂອງເຈົ້າ, ແຕ່ເຈົ້າກໍບໍ່ມີວິທີທີ່ຈະສະແດງຄວາມຮູ້ສຶກເຫຼົ່ານັ້ນ. ນີ້ແມ່ນພາລະກິດໃນປັດຈຸບັນຂອງ ພຣະວິນຍານບໍລິສຸດ, ມີພຽງແຕ່ຄົນທີ່ສະແຫວງຫາຊີວິດຈຶ່ງສາມາດບັນລຸມັນໄດ້. ເຈົ້າຮູ້ສຶກວ່າພຣະເຈົ້າ ມີຄວາມຮັກທີ່ຍິ່ງໃຫຍ່ສໍາລັບເຈົ້າ ແລະ ເຈົ້າມີຄວາມຮູ້ສຶກທີ່ພິເສດບາງຢ່າງ. ເຖິງແມ່ນເຈົ້າບໍ່ມີຄໍາເວົ້າ ໃຫ້ອະທິຖານຢ່າງຊັດເຈນ, ເຈົ້າກໍຮູ້ສຶກຢູ່ສະເໝີວ່າຄວາມຮັກຂອງພຣະເຈົ້າເລິກສໍ່າກັບມະຫາສະໝຸດ. ບໍ່ມີຄໍາເວົ້າເໝາະສົມທີ່ຈະສະແດງອອກເຖິງສະພາວະແຫ່ງການເປັນຢູ່ນີ້ ແລະ ນີ້ແມ່ນສະພາວະທີ່ເກີດຂຶ້ນ ພາຍໃນຈິດວິນຍານຕະຫຼອດເວລາ. ຄໍາອະທິຖານ ແລະ ການສົນທະນາປະເພດນີ້ ເຊິ່ງແນໃສ່ການເຮັດ ໃຫ້ຄົນໜຶ່ງຫຍັບເຂົ້າໃກ້ພຣະເຈົ້າໃນຫົວໃຈຂອງເຂົາ ກໍເປັນສິ່ງທີ່ປົກກະຕິ.

ເຖິງແມ່ນບັດນີ້ ເວລາທີ່ຜູ້ຄົນ ການດໍາລົງຊີວິດໂດຍງົມຫາ ແລະ ສະແຫວງຫາໄດ້ເປັນອະດີດໄປ ແລ້ວ, ນັ້ນກໍບໍ່ໄດ້ໝາຍຄວາມວ່າພວກເຂົາບໍ່ຈໍາເປັນຕ້ອງອະທິຖານ ແລະ ສະແຫວງຫາອີກຕໍ່ໄປ ຫຼື ກໍລະນີທີ່ວ່າ ຜູ້ຄົນບໍ່ຈໍາເປັນຕ້ອງລໍຖ້າໃຫ້ຄວາມປະສົງຂອງພຣະເຈົ້າເປີດເຜີຍອອກກ່ອນຈຶ່ງຈະສືບຕໍ່ ປະຕິບັດພາລະກິດ; ສິ່ງເຫຼົ່ານີ້ເປັນພຽງແນວຄິດຜິດໆຂອງມະນຸດ. ພຣະເຈົ້າໄດ້ມາທ່າມກາງມະນຸດເພື່ອ ດໍາລົງຊີວິດຮ່ວມກັບພວກເຂົາ, ເພື່ອເປັນແສງສະຫວ່າງຂອງພວກເຂົາ, ເປັນຊີວິດຂອງພວກເຂົາ ແລະ ເປັນຫົນທາງຂອງພວກເຂົາ, ນີ້ຄືຄວາມຈິງ. ແນ່ນອນ ໃນການທີ່ພຣະເຈົ້າມາເທິງແຜ່ນດິນໂລກ, ພຣະອົງນໍາຫົນທາງ ແລະ ຊີວິດທີ່ເໝາະສົມກັບວຸດທິພາວະຂອງພວກເຂົາມາໃຫ້ມະນຸດຊາດຢ່າງ ແນ່ນອນ ເພື່ອໃຫ້ພວກເຂົາໄດ້ຊື່ນຊົມ, ພຣະອົງບໍ່ໄດ້ມາເພື່ອທໍາລາຍວິທີການປະຕິບັດທັງໝົດຂອງ ມະນຸດ. ມະນຸດບໍ່ດໍາລົງຊີວິດໂດຍການງົມຫາ ແລະ ສະແຫວງຫາອີກຕໍ່ໄປ ຍ້ອນສິ່ງເຫຼົ່ານີ້ຖືກທົດແທນ ການມາເທິງແຜ່ນດິນໂລກຂອງພຣະເຈົ້າເພື່ອປະຕິບັດພາລະກິດ ແລະ ກ່າວພຣະທໍາຂອງພຣະອົງ. ພຣະອົງໄດ້ມາເພື່ອປົດປ່ອຍມະນຸດຈາກຊີວິດແຫ່ງຄວາມມືດມົນ ແລະ ຄວາມມືດມົວທີ່ພວກເຂົາໄດ້ ນໍາພາ ແລະ ເພື່ອເຮັດໃຫ້ພວກເຂົາສາມາດມີຊີວິດທີ່ເຕັມໄປດ້ວຍແສງສະຫວ່າງ. ພາລະກິດໃນ ປັດຈຸບັນແມ່ນເພື່ອຊີ້ສິ່ງເຫຼົ່ານັ້ນອອກຢ່າງຊັດເຈນ, ເພື່ອເວົ້າຢ່າງຊັດເຈນ, ແຈ້ງການໂດຍກົງ ແລະ ເພື່ອອະທິບາຍສິ່ງຕ່າງໆຢ່າງແຈ່ມແຈ້ງ, ເພື່ອວ່າຜູ້ຄົນຈະສາມາດນໍາສິ່ງເຫຼົ່ານີ້ເຂົ້າສູ່ການປະຕິບັດ,

ຄືກັບທີ່ພຣະເຈົ້າເຢໂຮວານຳພາປະຊາຊົນອິດສະຣາເອນ, ບອກພວກເຂົາເຖິງວິທີການຖວາຍເຄື່ອງບູຊາ ແລະ ວິທີການສ້າງວິຫານ. ສະນັ້ນ ພວກເຈົ້າບໍ່ຈຳເປັນຕ້ອງດຳລົງຊີວິດໃນການສະແຫວງຫາຢ່າງຈິງຈັງອີກຕໍ່ໄປຄືກັບທີ່ເຈົ້າໄດ້ເຮັດຫຼັງຈາກທີ່ພຣະເຢຊູເຈົ້າໄດ້ຈາກໄປ. ແລ້ວພວກເຈົ້າຄວນສຳຜັດຜ່ານພາລະກິດແຫ່ງການເຜີຍແຜ່ຂ່າວປະເສີດໃນອະນາຄົດບໍ? ພວກເຈົ້າຄວນພະຍາຍາມງົມຫາຫົນທາງຂອງການດຳລົງຊີວິດທີ່ເໝາະສົມບໍ? ພວກເຈົ້າຄວນງົມຫາເພື່ອແຍກແຍະວິທີທີ່ພວກເຈົ້າຄວນປະຕິບັດໜ້າທີ່ຂອງພວກເຈົ້າເອງບໍ? ມັນຈຳເປັນບໍທີ່ຈະໃຫ້ພວກເຈົ້າຂາບລົງພື້ນ, ສະແຫວງຫາເພື່ອຮູ້ຈັກວິທີທີ່ພວກເຈົ້າຄວນເປັນພະຍານ? ມັນຈຳເປັນບໍທີ່ຈະໃຫ້ພວກເຈົ້າອົດອາຫານ ແລະ ອະທິຖານເພື່ອຮູ້ຈັກວິທີທີ່ພວກເຈົ້າຄວນນຸ່ງເຄື່ອງ ຫຼື ດຳລົງຊີວິດ? ມັນຈຳເປັນບໍທີ່ຈະໃຫ້ພວກເຈົ້າອະທິຖານຫາພຣະເຈົ້າທີ່ຢູ່ໃນສະຫວັນຢ່າງບໍ່ຢຸດຢັ້ງ ເພື່ອຮູ້ເຖິງວິທີທີ່ພວກເຈົ້າຄວນຍອມຮັບເອົາການຖືກປາບປາມໂດຍພຣະເຈົ້າ? ມັນຈຳເປັນບໍທີ່ຈະໃຫ້ພວກເຈົ້າອະທິຖານຢູ່ຕະຫຼອດເວລາ, ທັງກາງເວັນ ແລະ ກາງຄືນ, ເພື່ອຮູ້ຈັກວິທີທີ່ພວກເຈົ້າຄວນເຊື່ອຟັງພຣະເຈົ້າ? ມີຫຼາຍຄົນທ່າມກາງພວກເຈົ້າທີ່ເວົ້າວ່າພວກເຈົ້າບໍ່ສາມາດປະຕິບັດໄດ້ ຍ້ອນວ່າ ພວກເຈົ້າບໍ່ເຂົ້າໃຈ. ຜູ້ຄົນພຽງແຕ່ບໍ່ສົນໃຈຕໍ່ພາລະກິດຂອງພຣະເຈົ້າໃນປັດຈຸບັນ! ເຮົາໄດ້ກ່າວພຣະທຳຫຼາຍຂໍ້ແຕ່ດົນມາແລ້ວ, ແຕ່ພວກເຈົ້າບໍ່ໄດ້ສົນໃຈທີ່ຈະອ່ານພຣະທຳເຫຼົ່ານັ້ນແມ່ນແຕ່ໜ້ອຍດຽວ, ສະນັ້ນ ບໍ່ຕ້ອງສົງໄສເລີຍວ່າ ພວກເຈົ້າບໍ່ຮູ້ຈັກວິທີປະຕິບັດ. ແນ່ນອນໃນຍຸກປັດຈຸບັນ ພຣະວິນຍານບໍລິສຸດຍັງດົນບັນດານໃຫ້ພວກເຂົາຮູ້ສຶກເຖິງຄວາມສຸກ ແລະ ພຣະອົງດຳລົງຊີວິດຮ່ວມກັບມະນຸດ. ນີ້ແມ່ນແຫຼ່ງຂອງຄວາມຮູ້ສຶກພິເສດ ແລະ ຄວາມສຸກເຫຼົ່ານັ້ນ[ກ] ເຊິ່ງເກີດຂຶ້ນໃນຊີວິດຂອງເຈົ້າຢູ່ຕະຫຼອດເວລາ. ບາງຄັ້ງບາງຄາວ, ມື້ນັ້ນຈະມາເຖິງ ເຊິ່ງເປັນມື້ທີ່ເຈົ້າຮູ້ສຶກວ່າພຣະເຈົ້າເປັນຕາຮັກ ແລະ ເຈົ້າບໍ່ສາມາດເຮັດຫຍັງໄດ້ນອກຈາກອະທິຖານຫາພຣະອົງວ່າ "ໂອ ພຣະເຈົ້າ! ຄວາມຮັກຂອງພຣະອົງສວຍງາມຫຼາຍ ແລະ ພາບຫຼັກຂອງພຣະອົງກໍຍິ່ງໃຫຍ່ຫຼາຍ. ຂ້ານ້ອຍປາຖະໜາທີ່ຈະຮັກພຣະເຈົ້າໄດ້ເລິກເຊິ່ງກວ່າເດີມ. ຂ້ານ້ອຍປາຖະໜາທີ່ຈະອຸທິດທັງໝົດຂອງຕົວຂ້ານ້ອຍເອງເພື່ອສະຫຼະຊີວິດທັງໝົດຂອງຂ້ານ້ອຍ. ຂ້ານ້ອຍຈະອຸທິດທຸກຢ່າງໃຫ້ກັບພຣະອົງ, ຕາບໃດທີ່ສິ່ງນັ້ນແມ່ນເພື່ອພຣະອົງ, ຕາບໃດທີ່ເມື່ອເຮັດສິ່ງນີ້ແລ້ວ ຂ້ານ້ອຍຈະສາມາດຮັກພຣະອົງ...". ນີ້ຄືຄວາມຮູ້ສຶກປິຕິຍິນດີທີ່ພຣະວິນຍານບໍລິສຸດໄດ້ມອບໃຫ້ກັບເຈົ້າ. ມັນບໍ່ແມ່ນແສງສະຫວ່າງ ຫຼື ແສງເຍືອງທາງ; ມັນຄືປະສົບການແຫ່ງການຖືກດົນບັນດານ. ປະສົບການໃນລັກສະນະນີ້ຈະເກີດຂຶ້ນຄັ້ງແລ້ວຄັ້ງເລົ່າ: ບາງເທື່ອເມື່ອເຈົ້າຢູ່ໃນຫົນທາງຂອງເຈົ້າໃນການປະຕິບັດພາລະກິດ, ເຈົ້າຈະອະທິຖານ ແລະ ຫຍັບເຂົ້າໃກ້ພຣະເຈົ້າ ແລະ ເຈົ້າຈະຖືກດົນບັນດານຈົນເຖິງຈຸດທີ່ວ່າ ນໍ້າຕາຈະອາບໜ້າຂອງເຈົ້າ ແລະ ເຈົ້າຈະສູນເສຍການຄວບຄຸມທັງໝົດ ແລະ ເຈົ້າຈະຮ້ອນໃຈທີ່ຈະຊອກຫາສະຖານທີ່ເໝາະສົມເຊິ່ງເປັນບ່ອນທີ່ເຈົ້າສາມາດສະແດງອອກເຖິງຄວາມຮ້ອນຮົນທີ່ຢູ່ພາຍໃນຫົວໃຈຂອງເຈົ້າ... ຈະມີຫຼາຍຄັ້ງທີ່ເຈົ້າຢູ່ໃນສະຖານທີ່ສາທາລະນະບາງແຫ່ງ ແລະ ເຈົ້າຈະຮູ້ສຶກວ່າເຈົ້າໄດ້ຮັບຄວາມຮັກຂອງພຣະເຈົ້າ

ກ ຂໍ້ຄວາມຕົ້ນສະບັບອ່ານວ່າ "ສິ່ງເຫຼົ່ານີ້ແມ່ນບາງຢ່າງ".

ຢ່າງຫຼວງຫຼາຍ, ໂຊກຊະຕາຂອງເຈົ້າເປັນສິ່ງທີ່ທຳມະດາ ແລະ ຍິ່ງໄປກວ່ານັ້ນ ເຈົ້າກຳລັງດຳລົງຊີວິດຂອງເຈົ້າໂດຍມີຄວາມໝາຍຫຼາຍກວ່າຄົນອື່ນໆ. ເຈົ້າຈະຮູ້ຈັກຢ່າງເລິກເຊິ່ງວ່າພຣະເຈົ້າຍົກຍ້ອງເຈົ້າ ແລະ ນີ້ຄືຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າທີ່ມີຕໍ່ເຈົ້າ. ໃນສ່ວນທີ່ເລິກທີ່ສຸດຂອງຫົວໃຈຂອງເຈົ້າ, ເຈົ້າຈະຮູ້ສຶກວ່າມີຄວາມຮັກບາງປະເພດໃນພຣະເຈົ້າທີ່ມະນຸດບໍ່ສາມາດສະແດງອອກໄດ້ ແລະ ບໍ່ສາມາດຢັ່ງເຖິງໄດ້, ຄືກັບວ່າເຈົ້າຮູ້ຈັກສິ່ງນັ້ນ ແຕ່ບໍ່ມີທາງທີ່ຈະບັນລະຍາຍເຖິງສິ່ງນັ້ນໄດ້, ເຮັດໃຫ້ເຈົ້າຢຸດຄິດຢູ່ສະເໝີ ແຕ່ກໍປ່ອຍໃຫ້ເຈົ້າບໍ່ສາມາດສະແດງມັນອອກໄດ້ຢ່າງຄົບຖ້ວນ. ໃນເວລາເຊັ່ນນີ້, ເຈົ້າຍິ່ງຈະລືມວ່າເຈົ້າຢູ່ໃສ ແລະ ເຈົ້າຈະຮ້ອງອອກມາວ່າ “ໂອ ພຣະເຈົ້າ! ພຣະອົງບໍ່ສາມາດຢັ່ງເຖິງໄດ້ ແລະ ເປັນທີ່ຮັກຫຼາຍ!” ສິ່ງນີ້ຈະເຮັດໃຫ້ຜູ້ຄົນມຶນງົງ, ແຕ່ທຸກສິ່ງດັ່ງກ່າວເກີດຂຶ້ນຢູ່ອ້ອມຂ້າງເລື້ອຍໆ. ພວກເຈົ້າໄດ້ຜະເຊີນກັບສິ່ງແບບນີ້ຢູ່ຫຼາຍຄັ້ງ. ນີ້ແມ່ນຊີວິດທີ່ພຣະວິນຍານບໍລິສຸດໄດ້ມອບໃຫ້ກັບເຈົ້າໃນປັດຈຸບັນ ແລະ ຊີວິດທີ່ເຈົ້າຄວນດຳເນີນ. ມັນບໍ່ແມ່ນເພື່ອຢຸດເຈົ້າຈາກການດຳລົງຊີວິດ, ແຕ່ກົງກັນຂ້າມ ມັນແມ່ນເພື່ອປ່ຽນແປງວິທີການດຳລົງຊີວິດຂອງເຈົ້າ. ມັນເປັນຄວາມຮູ້ສຶກທີ່ບໍ່ສາມາດບັນລະຍາຍ ຫຼື ອະທິບາຍໄດ້. ມັນຍັງເປັນຄວາມຮູ້ສຶກທີ່ແທ້ຈິງຂອງມະນຸດ ແລະ ຍິ່ງໄປກວ່ານັ້ນ ມັນຄືພາລະກິດຂອງພຣະວິນຍານບໍລິສຸດ. ເຈົ້າອາດເຂົ້າໃຈສິ່ງນັ້ນໃນຫົວໃຈຂອງເຈົ້າ, ແຕ່ເຈົ້າກໍບໍ່ມີທາງອະທິບາຍມັນໃຫ້ກັບຄົນອື່ນເຂົ້າໃຈໄດ້ຢ່າງຊັດເຈນເລີຍ. ນີ້ບໍ່ແມ່ນຍ້ອນເຈົ້າເວົ້າຊ້າ ຫຼື ເຈົ້າປາກພໍ່າ, ແຕ່ຍ້ອນມັນເປັນຄວາມຮູ້ສຶກທີ່ບໍ່ສາມາດບັນລະຍາຍໄດ້ດ້ວຍຄຳເວົ້າ. ເຈົ້າໄດ້ຮັບອະນຸຍາດເພື່ອຮັບເອົາສິ່ງເຫຼົ່ານີ້ໃນປັດຈຸບັນ ແລະ ນີ້ກໍແມ່ນຊີວິດທີ່ເຈົ້າຄວນດຳເນີນ. ແນ່ນອນ ດ້ານອື່ນໆຂອງຊີວິດຂອງເຈົ້າກໍບໍ່ໄດ້ວ່າງເປົ່າ; ມັນພຽງແຕ່ວ່າ ປະສົບການແຫ່ງການຖືກດົນບັນດານນີ້ໄດ້ກາຍມາເປັນຄວາມສຸກໃນຊີວິດຂອງເຈົ້າ ເຊິ່ງເຮັດໃຫ້ເຈົ້າເຕັມໃຈທີ່ຈະຮັບເອົາປະສົບການດັ່ງກ່າວຈາກພຣະວິນຍານບໍລິສຸດ. ແຕ່ເຈົ້າກໍຄວນຮູ້ຈັກການຖືກດົນບັນດານໃນລັກສະນະນີ້ບໍ່ໄດ້ເກີດຂຶ້ນເພື່ອໃຫ້ເຈົ້າຢູ່ເໜືອເນື້ອໜັງ ແລະ ໄປສະຫວັນຊັ້ນສາມ ຫຼື ເດີນທາງໄປທົ່ວແຜ່ນດິນໂລກ. ກົງກັນຂ້າມ, ມັນແມ່ນເພື່ອໃຫ້ເຈົ້າຮູ້ສຶກເຖິງ ແລະ ຊີມລົດຊາດແຫ່ງຄວາມຮັກຂອງພຣະເຈົ້າທີ່ເຈົ້າໄດ້ຮັບໃນປັດຈຸບັນ, ເພື່ອຜະເຊີນກັບຄວາມໝາຍແຫ່ງພາລະກິດຂອງພຣະເຈົ້າໃນປັດຈຸບັນ ແລະ ເຮັດໃຫ້ເຈົ້າເອງລຶ້ງເຄີຍກັບການດູແລ ແລະ ການປົກປ້ອງຂອງພຣະເຈົ້າອີກຄັ້ງ. ທຸກສິ່ງເຫຼົ່ານີ້ແມ່ນເພື່ອໃຫ້ເຈົ້າມີຄວາມຮູ້ທີ່ຫຼາຍຂຶ້ນກ່ຽວກັບພາລະກິດທີ່ພຣະເຈົ້າເຮັດໃນປັດຈຸບັນ, ນີ້ແມ່ນເປົ້າໝາຍຂອງພຣະເຈົ້າໃນການປະຕິບັດພາລະກິດນີ້.

ການສະແຫວງຫາ ແລະ ການງົມຫາເປັນຮູບແບບຂອງຊີວິດກ່ອນການບັງເກີດເປັນມະນຸດຂອງພຣະເຈົ້າ. ໃນເວລານັ້ນ ຜູ້ຄົນບໍ່ສາມາດເຫັນພຣະເຈົ້າ ແລະ ສະນັ້ນຈຶ່ງບໍ່ມີທາງເລືອກ ນອກຈະສະແຫວງຫາ ແລະ ງົມຫາ. ໃນປັດຈຸບັນ ເຈົ້າໄດ້ເຫັນພຣະເຈົ້າ ແລະ ພຣະອົງກໍບອກເຈົ້າເຖິງວິທີທີ່ເຈົ້າຄວນປະຕິບັດໂດຍກົງ; ນີ້ຄືເຫດຜົນທີ່ວ່າເປັນຫຍັງເຈົ້າຈຶ່ງບໍ່ຈຳເປັນຕ້ອງງົມຫາ ຫຼື ສະແຫວງຫາອີກຕໍ່ໄປ. ເສັ້ນທາງທີ່ພຣະອົງນຳພາມະນຸດແມ່ນເສັ້ນທາງແຫ່ງຄວາມຈິງ ແລະ ສິ່ງຕ່າງໆທີ່ພຣະອົງບອກມະນຸດ ແລະ ສິ່ງທີ່ມະນຸດໄດ້ຮັບກໍແມ່ນຊີວິດ ແລະ ຄວາມຈິງ. ເຈົ້າມີຫົນທາງ, ຊີວິດ ແລະ ຄວາມຈິງ,

ແລ້ວຈຳເປັນຫຍັງຈຶ່ງຕ້ອງສະແຫວງຫາຢູ່ທຸກບ່ອນ? ພຣະວິນຍານບໍລິສຸດບໍ່ປະຕິບັດສອງຂັ້ນຕອນຂອງພາລະກິດໃນເວລາດຽວກັນ. ເມື່ອເຮົາໄດ້ສຳເລັດການກ່າວພຣະທຳຂອງເຮົາແລ້ວ ຖ້າຜູ້ຄົນຍັງບໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງລະມັດລະວັງ ແລະ ສະແຫວງຫາຄວາມຈິງຢ່າງຖືກຕ້ອງ, ຍັງເຮັດແບບດຽວກັນກັບທີ່ພວກເຂົາເຮັດໃນຍຸກແຫ່ງພຣະຄຸນ, ງຶມຫາຄືກັບວ່າພວກເຂົາຕາບອດ, ອະທິຖານ ແລະ ສະແຫວງຫາຢູ່ຕະຫຼອດເວລາ, ນັ້ນຈະບໍ່ແມ່ນໝາຍຄວາມວ່າ ຂັ້ນຕອນນີ້ຂອງພາລະກິດຂອງເຮົາເຊິ່ງເປັນພາລະກິດແຫ່ງພຣະທຳ ຖືກປະຕິບັດຢ່າງສູນເປົ່າບໍ? ເຖິງແມ່ນເຮົາອາດສຳເລັດໃນການກ່າວພຣະທຳຂອງເຮົາ, ຜູ້ຄົນກໍຍັງບໍ່ເຂົ້າໃຈຢ່າງຄົບຖ້ວນ ແລະ ນີ້ກໍເປັນຍ້ອນພວກເຂົາຂາດຄວາມສາມາດ. ບັນຫານີ້ສາມາດໄດ້ຮັບການແກ້ໄຂໂດຍການດຳລົງຊີວິດໃນຄຣິສຕະຈັກ ແລະ ຜ່ານທາງການສົນທະນາຮ່ວມກັນ. ເມື່ອກ່ອນ, ໃນຍຸກແຫ່ງພຣະຄຸນ, ເຖິງແມ່ນພຣະເຈົ້າບັງເກີດເປັນມະນຸດ, ພຣະອົງກໍບໍ່ໄດ້ປະຕິບັດພາລະກິດແຫ່ງພຣະທຳ ເຊິ່ງນັ້ນຄືເຫດຜົນທີ່ວ່າ ເປັນຫຍັງພຣະວິນຍານບໍລິສຸດຈຶ່ງປະຕິບັດພາລະກິດໃນລັກສະນະນັ້ນໃນຕອນນັ້ນເພື່ອຮັກສາພາລະກິດດັ່ງກ່າວ. ໃນເວລານັ້ນ ຕົ້ນຕໍແລ້ວ ກໍແມ່ນພຣະວິນຍານບໍລິສຸດເປັນຜູ້ປະຕິບັດພາລະກິດ, ແຕ່ບັດນີ້ແມ່ນພຣະເຈົ້າທີ່ບັງເກີດເປັນມະນຸດເອງທີ່ກຳລັງປະຕິບັດພາລະກິດແທນພຣະວິນຍານບໍລິສຸດ. ເມື່ອກ່ອນ, ຕາບໃດທີ່ມະນຸດອະທິຖານຢູ່ເລື້ອຍໆ ພວກເຂົາກໍຈະຜະເຊີນກັບສັນຕິສຸກ ແລະ ຄວາມປິຕິຍິນດີ; ມີການຕຳນິຕິເຕືອນ ແລະ ພ້ອມດ້ວຍການລົງວິໄນ. ນີ້ແມ່ນພາລະກິດທັງໝົດຂອງພຣະວິນຍານບໍລິສຸດ. ບັດນີ້ ສະພາວະເຫຼົ່ານີ້ແມ່ນມີໜ້ອຍຫຼາຍ. ພຣະວິນຍານບໍລິສຸດພຽງແຕ່ສາມາດປະຕິບັດພາລະກິດປະເພດດຽວໃນຍຸກໃດໜຶ່ງ. ຖ້າພຣະອົງປະຕິບັດພາລະກິດສອງປະເພດໃນເວລາດຽວກັນ ໂດຍທີ່ເນື້ອໜັງປະຕິບັດພາລະກິດໜຶ່ງ ແລະ ພຣະວິນຍານບໍລິສຸດປະຕິບັດອີກພາລະກິດພາຍໃນຜູ້ຄົນ ແລະ ຖ້າສິ່ງທີ່ເນື້ອໜັງກ່າວບໍ່ໄດ້ນັບ ແລະ ມີພຽງແຕ່ສິ່ງທີ່ພຣະວິນຍານກ່າວຖືກນັບ, ແລ້ວພຣະຄຣິດກໍບໍ່ມີຄວາມຈິງ, ຫົນທາງ ຫຼື ຊີວິດໃຫ້ກ່າວເຖິງເລີຍ. ນີ້ຈະເປັນການຂັດແຍ້ງຕົນເອງ. ພຣະວິນຍານບໍລິສຸດສາມາດປະຕິບັດພາລະກິດແບບນີ້ໄດ້ບໍ? ພຣະເຈົ້າລິດທານຸພາບສູງສຸດ ແລະ ຮອບຮູ້, ສັກສິດ ແລະ ຊອບທຳ ແລະ ພຣະອົງບໍ່ໄດ້ເຮັດຫຍັງຜິດແທ້ໆເລີຍ.

ມີການອອກນອກຮູ້ນອກທາງ ແລະ ຄວາມຜິດພາດໃນປະສົບການໃນອະດີດຂອງຜູ້ຄົນຫຼາຍເກີນໄປ. ມີບາງສິ່ງທີ່ຜູ້ຄົນທີ່ມີຄວາມເປັນມະນຸດທຳມະດາຄວນມີ ຫຼື ຄວນເຮັດ ຫຼື ມີຄວາມຜິດພາດທີ່ຍາກຈະຫຼີກເວັ້ນໄດ້ໃນຊີວິດຂອງມະນຸດ ແລະ ເມື່ອສິ່ງເຫຼົ່ານີ້ບໍ່ໄດ້ຖືກຈັດການຢ່າງສົມເຫດສົມຜົນ, ຜູ້ຄົນກໍໂຍນຄວາມຮັບຜິດຊອບສຳລັບສິ່ງດັ່ງກ່າວໃຫ້ກັບພຣະເຈົ້າ. ມີເອື້ອຍນ້ອງຄົນໜຶ່ງທີ່ມີແຂກມາຢ້ຽມຢາມຢູ່ເຮືອນຂອງລາວ. ລາວໜຶ້ງສາລະເປົາຂອງລາວບໍ່ສຸກ, ແລ້ວລາວກໍຄິດວ່າ "ນີ້ອາດເປັນການລົງວິໄນຂອງພຣະເຈົ້າ. ພຣະເຈົ້າກຳລັງຈັດການກັບຫົວໃຈທີ່ອວດອົ່ງຂອງຂ້ານ້ອຍອີກຄັ້ງ; ຄວາມທະນົງຕົວຂອງຂ້ານ້ອຍຮ້າຍແຮງຫຼາຍເກີນໄປ". ຕາມຄວາມເປັນຈິງແລ້ວ ເມື່ອເວົ້າເຖິງວິທີການຄິດຂອງມະນຸດທຳມະດາ, ເມື່ອແຂກມາຢ້ຽມຢາມ, ເຈົ້າກໍຕື່ນເຕັ້ນ ແລະ ຟ້າວເຮັດນັ້ນເຮັດນີ້, ຫຍຸ້ງໃນທຸກສິ່ງທີ່ເຈົ້າກຳລັງເຮັດ ແລະ ດ້ວຍເຫດນັ້ນ ມັນຈຶ່ງເປັນເລື່ອງປົກກະຕິທີ່ໝໍ້ເຂົ້າອາດຈະໄໝ້ ຫຼື

ອາຫານມີລົດຊາດເຄັມເກີນໄປ. ສິ່ງນີ້ແມ່ນມາຈາກຄວາມຕື່ນເຕັ້ນຫຼາຍເກີນໄປ, ແຕ່ຜູ້ຄົນກໍມັກສະຫຼຸບຄວາມວ່າມັນເປັນຍ້ອນ "ການລົງວິໄນຂອງພຣະເຈົ້າ". ໃນຄວາມຈິງແລ້ວ ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຄວາມຜິດພາດທີ່ເກີດຂຶ້ນໃນຊີວິດຂອງມະນຸດ. ເຈົ້າຈະບໍ່ພະເຊີນກັບສິ່ງນີ້ເຊັ່ນກັນບໍ ຖ້າເຈົ້າບໍ່ເຊື່ອໃນພຣະເຈົ້າ? ບັນຫາທີ່ເກີດຂຶ້ນເປັນຜົນມາຈາກຄວາມຜິດພາດທີ່ເກີດຂຶ້ນຈາກຜູ້ຄົນ, ມັນບໍ່ແມ່ນຄວາມຈິງທີ່ຄວາມຜິດພາດດັ່ງກ່າວຈະເປັນການກະທຳຂອງພຣະວິນຍານບໍລິສຸດ. ຄວາມຜິດພາດດັ່ງກ່າວບໍ່ກ່ຽວຂ້ອງຫຍັງກັບພຣະເຈົ້າ. ຄືກັນກັບເມື່ອເຈົ້າກັດລີ້ນຕົນເອງໃນເວລາທີ່ກຳລັງຫຍໍ້າເຂົ້າ, ສິ່ງນັ້ນຈະສາມາດເປັນການລົງວິໄນຂອງພຣະເຈົ້າໄດ້ແນວໃດ? ການລົງວິໄນຂອງພຣະເຈົ້າແມ່ນມີຫຼັກການ ແລະ ໂດຍປົກກະຕິແລ້ວແມ່ນຈະໄດ້ເຫັນໃນເວລາທີ່ເຈົ້າຮູ້ວ່າຕົນເອງເຮັດຜິດ. ມີພຽງແຕ່ເມື່ອເຈົ້າເຮັດສິ່ງຕ່າງໆໂດຍກ່ຽວຂ້ອງກັບນາມຂອງພຣະເຈົ້າ ຫຼື ກ່ຽວຂ້ອງກັບຄຳພະຍານ ຫຼື ພາລະກິດຂອງພຣະອົງ, ພຣະອົງຈຶ່ງຈະລົງວິໄນເຈົ້າ. ໃນປັດຈຸບັນນີ້ ຜູ້ຄົນເຂົ້າໃຈຄວາມຈິງຫຼາຍພໍທີ່ຈະມີສະຕິພາຍໃນກ່ຽວກັບສິ່ງຕ່າງໆທີ່ພວກເຂົາເຮັດ. ຕົວຢ່າງເຊັ່ນ ເຈົ້າຈະບໍ່ຮູ້ສຶກຫຍັງເລີຍບໍ ຖ້າເຈົ້າຍັກຍອກເງິນຂອງຄຣິສຕະຈັກ ຫຼື ເຈົ້າໃຊ້ເງິນນັ້ນຢ່າງເລີນເລີ້? ເຈົ້າຈະຮູ້ສຶກເຖິງບາງຢ່າງເມື່ອກຳລັງເຮັດສິ່ງນັ້ນ. ມັນເປັນໄປບໍ່ໄດ້ທີ່ຈະຮູ້ສຶກເຖິງບາງຢ່າງຫຼັງຈາກໄດ້ກະທຳສຳເລັດໄປແລ້ວ. ເຈົ້າຮູ້ຢ່າງຊັດເຈນກ່ຽວກັບສິ່ງຕ່າງໆທີ່ເຈົ້າເຮັດ ເຊິ່ງຂັດກັບຄວາມຮູ້ສຶກຂອງເຈົ້າ. ຍ້ອນຜູ້ຄົນມີຄວາມມັກ ແລະ ຄວາມຕ້ອງການຂອງພວກເຂົາເອງ, ພວກເຂົາຈຶ່ງພຽງແຕ່ເຮັດໃຫ້ຕົນເອງພໍໃຈ ເຖິງແມ່ນວ່າ ພວກເຂົາຈະຮູ້ວິທີນຳເອົາຄວາມຈິງເຂົ້າສູ່ການປະຕິບັດຢ່າງຊັດເຈນກໍຕາມ. ເມື່ອເປັນດັ່ງນັ້ນ ຫຼັງຈາກທີ່ພວກເຂົາເຮັດບາງສິ່ງ ພວກເຂົາກໍບໍ່ໄດ້ຮູ້ສຶກເຖິງການຕຳນິຕິເຕືອນແຕ່ປະການໃດ ຫຼື ພົບກັບການລົງວິໄນຢ່າງແນ່ນອນ. ນີ້ກໍຍ້ອນວ່າພວກເຂົາຮູ້ຕົວວ່າ ເຮັດຜິດ, ສະນັ້ນ ພຣະເຈົ້າຈຶ່ງບໍ່ລົງວິໄນພວກເຂົາ; ຫຼັງຈາກເວລາແຫ່ງການພິພາກສາທີ່ຊອບທຳໄດ້ມາເຖິງ, ການລົງໂທດຂອງພຣະເຈົ້າຈຶ່ງຈະເກີດຂຶ້ນກັບແຕ່ລະຄົນໂດຍອີງຕາມການກະທຳຂອງພວກເຂົາ. ໃນປັດຈຸບັນແມ່ນມີບາງຄົນໃນຄຣິສຕະຈັກທີ່ຍັກຍອກເງິນ, ບາງຄົນທີ່ບໍ່ກຳນົດຂອບເຂດຢ່າງຊັດເຈນລະຫວ່າງຜູ້ຊາຍ ແລະ ແມ່ຍິງ ແລະ ບາງຄົນທີ່ຕັດສິນ, ທ້າທາຍ ແລະ ພະຍາຍາມມ້າງທຳລາຍພາລະກິດຂອງພຣະເຈົ້າຢ່າງລັບໆ. ເປັນຫຍັງພວກເຂົາທຸກຄົນຈຶ່ງຍັງມີຄວາມສຸກຢູ່? ເມື່ອໄດ້ເຮັດສິ່ງດັ່ງກ່າວ, ພວກເຂົາກໍມີສະຕິ ແລະ ຮູ້ສຶກເຖິງການຕຳໜິຕິເຕືອນໃນຫົວໃຈຂອງພວກເຂົາ ແລະ ຍ້ອນສິ່ງນີ້ ພວກເຂົາຈຶ່ງທົນທຸກກັບການຂ້ຽນຕີ ແລະ ການຫຼົ່ຫຼອມເປັນບາງຄັ້ງ, ແຕ່ພວກເຂົາບໍ່ຮູ້ສຶກອາຍເທົ່ານັ້ນເອງ! ຄືກັບເວລາທີ່ຜູ້ຄົນມີເພດສຳພັນກັບຫຼາຍຄົນ, ພວກເຂົາກໍມີສະຕິໃນສິ່ງທີ່ພວກເຂົາກຳລັງເຮັດໃນເວລານັ້ນ, ແຕ່ຕັນຫາຂອງພວກເຂົາແມ່ນມີຫຼາຍເກີນໄປ ແລະ ພວກເຂົາບໍ່ສາມາດຄວບຄຸມຕົນເອງໄດ້. ເຖິງແມ່ນພຣະວິນຍານບໍລິສຸດຈະລົງວິໄນພວກເຂົາ, ມັນກໍຈະບໍ່ມີປະໂຫຍດຫຍັງ, ສະນັ້ນ ພຣະວິນຍານບໍລິສຸດຈຶ່ງບໍ່ໄດ້ລົງວິໄນ. ຖ້າພຣະວິນຍານບໍລິສຸດບໍ່ລົງວິໄນພວກເຂົາ ແລ້ວຖ້າພວກເຂົາບໍ່ຮູ້ສຶກເຖິງການຕຳໜິຕິເຕືອນ ແລະ ບໍ່ມີຫຍັງເກີດຂຶ້ນກັບເນື້ອໜັງຂອງພວກເຂົາ, ແມ່ນຫຍັງຄືການຕຳໜິຕິເຕືອນທີ່ສາມາດເກີດຂຶ້ນຫຼັງຈາກນັ້ນ? ຄວາມຜິດແມ່ນໄດ້ເຮັດໄປແລ້ວ, ການລົງວິໄນຈະມີຜົນປະໂຫຍດຫຍັງ? ມັນພຽງແຕ່ພິສູດວ່າພວກເຂົາບໍ່ມີຢາງ

ອາຍເກີນໄປ ແລະ ຂາດຄວາມເປັນມະນຸດ ແລະ ພວກເຂົາສົມຄວນແກ່ຄຳສາບແຊ່ງ ແລະ ການລົງໂທດ! ພຣະວິນຍານບໍລິສຸດບໍ່ປະຕິບັດພາລະກິດໂດຍບໍ່ຈຳເປັນ. ຖ້າເຈົ້າຮູ້ຈັກຄວາມຈິງເປັນຢ່າງດີ ແຕ່ບໍ່ໄດ້ນຳຄວາມຈິງນັ້ນເຂົ້າສູ່ການປະຕິບັດ, ຖ້າເຈົ້າສາມາດເຮັດການຊົ່ວຮ້າຍໄດ້, ແລ້ວສິ່ງທີ່ເຈົ້າຈະສາມາດລໍຖ້າໄດ້ກໍມີແຕ່ການມາເຖິງຂອງມື້ທີ່ເຈົ້າຈະຖືກລົງໂທດພ້ອມກັບສິ່ງຊົ່ວຮ້າຍເທົ່ານັ້ນ. ນີ້ແມ່ນຈຸດຈົບທີ່ດີທີ່ສຸດຂອງເຈົ້າ! ບັດນີ້ ເຮົາໄດ້ເທດສະໜາຊໍ້າແລ້ວຊໍ້າອີກກ່ຽວກັບຄວາມສຳນຶກ ເຊິ່ງເປັນບັນທັດຖານທີ່ເລັກນ້ອຍທີ່ສຸດ. ຖ້າຜູ້ຄົນຂາດຄວາມສຳນຶກ, ແລ້ວພວກເຂົາກໍໄດ້ສູນເສຍການລົງວິໄນຂອງພຣະວິນຍານບໍລິສຸດແລ້ວ; ພວກເຂົາສາມາດເຮັດຫຍັງກໍຕາມທີ່ພວກເຂົາປາຖະໜາ ແລະ ພຣະເຈົ້າກໍຈະບໍ່ສົນໃຈພວກເຂົາອີກ. ຄົນທີ່ມີຄວາມສຳນຶກ ແລະ ເຫດຜົນແທ້ຈິງກໍຈະຮູ້ຈັກເຖິງສິ່ງນັ້ນ ເມື່ອພວກເຂົາເຮັດໃນສິ່ງທີ່ຜິດ. ພວກເຂົາຈະຮູ້ສຶກອຶດອັດຫຼັງຈາກທີ່ພວກເຂົາຮູ້ສຶກເຖິງການຕຳນິຕິເຕືອນແມ່ນແຕ່ເລັກນ້ອຍໃນຄວາມສຳນຶກຂອງພວກເຂົາ; ພວກເຂົາຈະຜ່ານການຕໍ່ສູ້ທີ່ຢູ່ຂ້າງໃນ ແລະ ໃນທີ່ສຸດແລ້ວ ພວກເຂົາກໍຈະປະຖິ້ມເນື້ອໜັງ. ພວກເຂົາຈະບໍ່ໄປເຖິງຈຸດທີ່ພວກເຂົາເຮັດໃນສິ່ງທີ່ຕໍ່ຕ້ານພຣະເຈົ້າຢ່າງຮຸນແຮງ. ບໍ່ວ່າພຣະວິນຍານບໍລິສຸດຈະລົງວິໄນ ແລະ ຂ້ຽນຕີພວກເຂົາ ຫຼື ບໍ່, ທຸກຄົນກໍຈະມີຄວາມຮູ້ສຶກເຖິງບາງຢ່າງເມື່ອພວກເຂົາເຮັດໃນສິ່ງທີ່ຜິດ. ສະນັ້ນ ບັດນີ້ ຜູ້ຄົນຈຶ່ງເຂົ້າໃຈຄວາມຈິງທຸກປະເພດ ແລະ ຖ້າພວກເຂົາບໍ່ປະຕິບັດຄວາມຈິງເຫຼົ່ານັ້ນ ແລ້ວນັ້ນກໍເປັນບັນຫາຂອງມະນຸດ. ເຮົາບໍ່ມີປະຕິກິລິຍາກັບຄົນແບບນີ້ເລີຍ ຫຼື ເຮົາບໍ່ຄາດຫວັງຫຍັງສຳລັບພວກເຂົາ. ເຈົ້າສາມາດເຮັດຕາມທີ່ເຈົ້າພໍໃຈ!

ເມື່ອບາງຄົນມາຢູ່ຮ່ວມກັນ, ພວກເຂົາກໍວາງພຣະທຳຂອງພຣະເຈົ້າໄວ້ຂ້າງໜຶ່ງ ແລະ ກໍພາກັນເວົ້າເຖິງຄົນນັ້ນ ຫຼື ຄົນນີ້ວ່າເປັນແນວນັ້ນແນວນີ້ຢູ່ສະເໝີ. ແນ່ນອນ ມັນເປັນສິ່ງທີ່ດີໃນການຢັ່ງເບິ່ງຜູ້ຄົນເລັກໆນ້ອຍໆ, ເພື່ອບໍ່ວ່າ ເຈົ້າຈະໄປໃສກໍຕາມ ເຈົ້າຈະບໍ່ຖືກຫຼອກລວງຢ່າງງ່າຍດາຍ ຫຼື ຖືກໂກງ ຫຼື ຖືກຕົວະ, ສິ່ງນີ້ແມ່ນເປັນອີກດ້ານທີ່ຜູ້ຄົນຄວນມີ. ແຕ່ເຈົ້າຕ້ອງບໍ່ໃສ່ໃຈກັບດ້ານນີ້ພຽງດ້ານດຽວ. ສິ່ງນີ້ແມ່ນກ່ຽວຂ້ອງກັບດ້ານລົບຂອງສິ່ງຕ່າງໆ ແລະ ເຈົ້າບໍ່ສາມາດໃສ່ໃຈຄົນອື່ນຢູ່ຕະຫຼອດ. ບັດນີ້ເຈົ້າມີຄວາມຮູ້ພຽງເລັກນ້ອຍກ່ຽວກັບວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ, ຄວາມເຊື່ອຂອງເຈົ້າທີ່ມີໃນພຣະເຈົ້າກໍຢູ່ໃນລະດັບຜິວເຜີນຫຼາຍເກີນໄປ ແລະ ເຈົ້າມີສິ່ງດ້ານບວກໜ້ອຍເກີນໄປ. ຜູ້ທີ່ເຈົ້າເຊື່ອແມ່ນພຣະເຈົ້າ ແລະ ຜູ້ທີ່ເຈົ້າຕ້ອງເຂົ້າໃຈກໍແມ່ນພຣະເຈົ້າ, ບໍ່ແມ່ນຊາຕານ. ຖ້າເຈົ້າພຽງແຕ່ຮູ້ຈັກວິທີທີ່ຊາຕານເຮັດພາລະກິດ ແລະ ທຸກວິທີທີ່ວິນຍານຊົ່ວຮ້າຍເຮັດພາລະກິດ, ແຕ່ບໍ່ມີຄວາມຮູ້ຫຍັງກ່ຽວກັບພຣະເຈົ້າເລີຍ, ສິ່ງນັ້ນຈະມີປະໂຫຍດຫຍັງ? ບໍ່ແມ່ນພຣະເຈົ້າບໍ ທີ່ເຈົ້າເຊື່ອໃນປັດຈຸບັນນີ້? ເປັນຫຍັງຄວາມຮູ້ຂອງເຈົ້າຈຶ່ງບໍ່ລວມມີສິ່ງດ້ານບວກເຫຼົ່ານີ້? ເຈົ້າພຽງແຕ່ບໍ່ສົນໃຈກັບດ້ານບວກຂອງທາງເຂົ້າ ຫຼື ເຈົ້າບໍ່ເຂົ້າໃຈມັນເລີຍ, ແລ້ວເຈົ້າຕ້ອງການຮັບເອົາຫຍັງໃນຄວາມເຊື່ອຂອງເຈົ້າແທ້ຈິງ? ເຈົ້າບໍ່ຮູ້ຈັກບໍ ວ່າເຈົ້າຄວນສະແຫວງຫາແນວໃດ? ເຈົ້າຮູ້ກ່ຽວກັບດ້ານລົບຫຼາຍ, ແຕ່ເຈົ້າ ກໍລົ້ມເຫຼວໃນດ້ານບວກຂອງທາງເຂົ້າ, ແລ້ວວຸດທິພາວະຂອງເຈົ້າຈະເຕີບໃຫຍ່ໄດ້ແນວໃດ? ແມ່ນຫຍັງຄືຄວາມຫວັງໃນອະນາຄົດສຳລັບການພັດທະນາທີ່ຄົນແບບເຈົ້າຈະມີ ຜູ້ທີ່ບໍ່ສົນໃຈເວົ້າສິ່ງອື່ນ ນອກຈາກ

ກ່ຽວກັບສິ່ງຄາມກັບຊາຕານ? ທາງເຂົ້າຂອງເຈົ້າຈະບໍ່ຫຼ້າສະໄໝເກີນໄປບໍ? ເຈົ້າຈະສາມາດຮັບເອົາຫຍັງໄດ້ແດ່ຈາກພາລະກິດໃນປັດຈຸບັນໂດຍການເຮັດແບບນີ້? ສິ່ງທີ່ຢູ່ປັດຈຸບັນແມ່ນກະແຈໃຫ້ເຈົ້າເຂົ້າໃຈໃນສິ່ງທີ່ພຣະເຈົ້າຕ້ອງການເຮັດໃນຕອນນີ້, ວິທີທີ່ມະນຸດຄວນຮ່ວມມື, ວິທີທີ່ພວກເຂົາຄວນຮັກພຣະເຈົ້າ, ວິທີທີ່ພວກເຂົາຄວນເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດ, ວິທີທີ່ພວກເຂົາຄວນເຂົ້າສູ່ພຣະທຳທຸກຂໍ້ທີ່ພຣະເຈົ້າກ່າວໃນປັດຈຸບັນນີ້, ວິທີທີ່ພວກເຂົາຄວນກິນ ແລະ ດື່ມ, ຜະເຊີນ ແລະເຂົ້າໃຈພຣະທຳເຫຼົ່ານັ້ນ, ວິທີທີ່ພວກເຂົາຄວນບັນລຸຕາມຄວາມປະສົງຂອງພຣະເຈົ້າ, ຖືກພຣະເຈົ້າເອົາຊະນະຢ່າງສົມບູນ ແລະ ຍອມຈຳນົນຕໍ່ໜ້າພຣະເຈົ້າ... ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຈົ້າຄວນໃສ່ໃຈ ແລະ ສິ່ງທີ່ເຈົ້າຄວນເຂົ້າສູ່ໃນປັດຈຸບັນ. ເຈົ້າເຂົ້າໃຈບໍ? ມັນຈະມີປະໂຫຍດຫຍັງທີ່ຈະໄປໃສ່ໃຈໃນການຢັ່ງຮູ້ຄົນອື່ນຢ່າງດຽວ? ເຈົ້າສາມາດຢັ່ງຮູ້ຊາຕານໃນທີ່ນີ້, ຢັ່ງຮູ້ວິນຍານຊົ່ວຮ້າຍໃນທີ່ນັ້ນ, ເຈົ້າສາມາດມີຄວາມເຂົ້າໃຈຢ່າງຄົບຖ້ວນກ່ຽວກັບວິນຍານຊົ່ວຮ້າຍ, ແຕ່ຖ້າເຈົ້າບໍ່ສາມາດເວົ້າຫຍັງກ່ຽວກັບພາລະກິດຂອງພຣະເຈົ້າ, ການຢັ່ງຮູ້ເຫຼົ່ານັ້ນສາມາດເຮັດໜ້າທີ່ແທນການເຂົ້າໃຈພຣະເຈົ້າໄດ້ບໍ? ເຮົາໄດ້ສົນທະນາກ່ອນໜ້ານີ້ກ່ຽວກັບການສະແດງອອກຂອງພາລະກິດຂອງວິນຍານຊົ່ວຮ້າຍ, ແຕ່ນີ້ບໍ່ທັນແມ່ນເລື່ອງທີ່ໃຫຍ່ທີ່ສຸດ. ແນ່ນອນ ຜູ້ຄົນຄວນມີການຢັ່ງຮູ້ບາງຢ່າງ ແລະ ນີ້ແມ່ນລັກສະນະທີ່ຄົນທີ່ຮັບໃຊ້ພຣະເຈົ້າຄວນມີ ເພື່ອຫຼີກເວັ້ນການເຮັດສິ່ງໂງ່ໆ ແລະ ການແຊກແຊງພາລະກິດຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ ສິ່ງສຳຄັນທີ່ສຸດກໍຍັງເປັນການມີຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ ແລະ ການເຂົ້າໃຈຄວາມປະສົງຂອງພຣະເຈົ້າ. ແມ່ນຫຍັງຄືຄວາມຮູ້ກ່ຽວກັບຂັ້ນຕອນນີ້ຂອງພາລະກິດຂອງພຣະເຈົ້າທີ່ຢູ່ພາຍໃນຕົວເຈົ້າ? ເຈົ້າສາມາດເວົ້າໄດ້ບໍວ່າແມ່ນຫຍັງຄືສິ່ງທີ່ພຣະເຈົ້າເຮັດ, ຄວາມປະສົງຂອງພຣະເຈົ້າແມ່ນຫຍັງ, ຂໍ້ບົກຜ່ອງຂອງເຈົ້າເອງແມ່ນຫຍັງ ແລະ ແມ່ນຫຍັງຄືສິ່ງທີ່ເຈົ້າຄວນປະກອບມີໃນຕົວເຈົ້າເອງ? ເຈົ້າສາມາດເວົ້າໄດ້ບໍວ່າທາງເຂົ້າທີ່ໃໝ່ທີ່ສຸດຂອງເຈົ້າແມ່ນຫຍັງ? ເຈົ້າຄວນສາມາດເກັບກ່ຽວໝາກຜົນ ແລະ ບັນລຸຄວາມເຂົ້າໃຈໃນທາງເຂົ້າໃໝ່. ຢ່າທຳທ່າສັບສົນ; ເຈົ້າຕ້ອງພະຍາຍາມຫຼາຍຍິ່ງຂຶ້ນໃນທາງເຂົ້າໃໝ່ເພື່ອເຮັດໃຫ້ປະສົບການ ແລະ ຄວາມຮູ້ຂອງເຈົ້າເອງເລິກເຊິ່ງຫຼາຍຂຶ້ນ ແລະຍິ່ງໄປກວ່ານັ້ນ ເຈົ້າຕ້ອງໄດ້ຮັບຄວາມເຂົ້າໃຈກ່ຽວກັບທາງເຂົ້າໃໝ່ທີ່ສຸດໃນປັດຈຸບັນ ແລະ ວິທີທີ່ຖືກຕ້ອງທີ່ສຸດໃນການຜະເຊີນກັບສິ່ງເຫຼົ່ານັ້ນ. ຍິ່ງໄປກວ່ານັ້ນ ຜ່ານທາງພາລະກິດໃໝ່ ແລະ ທາງເຂົ້າໃໝ່, ເຈົ້າຄວນມີການຢັ່ງຮູ້ເມື່ອເວົ້າເຖິງການປະຕິບັດທີ່ຫຼ້າສະໄໝ ແລະ ອອກນອກຮູ້ນອກທາງຂອງເຈົ້າກ່ອນໜ້ານີ້ ແລະ ສະແຫວງຫາວິທີທີ່ຈະໂຍນສິ່ງເຫຼົ່ານັ້ນຖິ້ມເພື່ອເຂົ້າສູ່ປະສົບການໃໝ່. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຈົ້າຈຳເປັນຕ້ອງເຂົ້າໃຈຢ່າງຮີບດ່ວນໃນປັດຈຸບັນ ແລະ ຕ້ອງເຂົ້າສູ່. ເຈົ້າຕ້ອງເຂົ້າໃຈເຖິງຄວາມແຕກຕ່າງ ແລະ ຄວາມສຳພັນລະຫວ່າງທາງເຂົ້າເກົ່າ ແລະ ໃໝ່. ຖ້າເຈົ້າບໍ່ມີຄວາມເຂົ້າໃຈໃນສິ່ງເຫຼົ່ານີ້, ແລ້ວເຈົ້າກໍຈະບໍ່ມີທາງຄືບໜ້າໄດ້, ຍ້ອນເຈົ້າຈະບໍ່ສາມາດຕາມທັນພາລະກິດຂອງພຣະວິນຍານບໍລິສຸດ. ເຈົ້າຕ້ອງສາມາດກິນ ແລະ ດື່ມພຣະທຳຂອງພຣະເຈົ້າຢ່າງເປັນປົກກະຕິ ແລະ ມີການສົນທະນາທີ່ປົກກະຕິ ແລະ ໃຊ້ສິ່ງເຫຼົ່ານັ້ນເພື່ອປ່ຽນແປງວິທີການປະຕິບັດທີ່ຫຼ້າສະໄໝຂອງເຈົ້າທີ່ຜ່ານມາແລະແນວຄິດຕາມປະເພນີດັ້ງເດີມຂອງເຈົ້າ ເພື່ອວ່າເຈົ້າຈະໄດ້ເຂົ້າສູ່ການປະຕິບັດໃໝ່ ແລະ ເຂົ້າສູ່ພາລະກິດ

ໃໝ່ຂອງພຣະເຈົ້າ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຈົ້າຄວນບັນລຸ. ເຮົາບໍ່ພຽງແຕ່ຂໍໃຫ້ເຈົ້າຄິດຫາວິທີທີ່ເຈົ້າຈະສາມາດບັນລຸສິ່ງນີ້ໄດ້ຢ່າງແທ້ຈິງ; ນີ້ບໍ່ແມ່ນເປົ້າໝາຍຂອງເຮົາ. ກົງກັນຂ້າມ ເຮົາກຳລັງຂໍໃຫ້ເຈົ້ານຳການປະຕິບັດຄວາມຈິງຂອງເຈົ້າ ແລະ ການເຂົ້າໃຈທາງເຂົ້າຂອງເຈົ້າເຂົ້າສູ່ຊີວິດຢ່າງຈິງຈັງ. ຄວາມສາມາດຂອງເຈົ້າໃນການຮູ້ຈັກຕົນເອງບໍ່ແມ່ນການສະແດງເຖິງວຸດທິພາວະທີ່ແທ້ຈິງຂອງເຈົ້າ. ຖ້າເຈົ້າສາມາດຜະເຊີນກັບພາລະກິດຂອງພຣະເຈົ້າ, ມີປະສົບການ ແລະ ຄວາມເຂົ້າໃຈກ່ຽວກັບຄວາມຈິງຕ່າງໆໃນພຣະທຳຂອງພຣະເຈົ້າ ແລະ ສາມາດແຍກແຍະແນວຄິດສ່ວນຕົວ ແລະ ຄວາມຜິດພາດຂອງເຈົ້າທີ່ຜ່ານມາ, ແລ້ວນີ້ກໍຄືວຸດທິພາວະທີ່ແທ້ຈິງຂອງເຈົ້າ ແລະ ເປັນສິ່ງທີ່ພວກເຈົ້າທຸກຄົນຄວນບັນລຸ.

ມີຫຼາຍສະຖານະການທີ່ພວກເຈົ້າບໍ່ເຂົ້າໃຈວິທີປະຕິບັດຢ່າງແທ້ຈິງ ແລະ ເຈົ້າຍິ່ງຮູ້ໜ້ອຍກ່ຽວກັບວິທີພຣະວິນຍານບໍລິສຸດປະຕິບັດພາລະກິດ. ບາງເທື່ອ ເຈົ້າເຮັດບາງສິ່ງທີ່ບໍ່ເຊື່ອຟັງພຣະວິນຍານບໍລິສຸດຢ່າງຊັດເຈນ. ຜ່ານທາງການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າກໍມີຄວາມເຂົ້າໃຈກ່ຽວກັບຫຼັກການໃນປັດຈຸບັນໃນເລື່ອງດັ່ງກ່າວ, ແລ້ວເຈົ້າກໍມີຄວາມຮູ້ສຶກຢູ່ພາຍໃນເຖິງການຕຳໜິຕິເຕືອນ ແລະ ຄວາມກະວົນກະວາຍ; ແນ່ນອນ ນີ້ແມ່ນຄວາມຮູ້ສຶກທີ່ຄົນໜຶ່ງຈະໄດ້ຮັບພາຍໃຕ້ສົມມຸດຕິຖານແຫ່ງການຮູ້ຈັກຄວາມຈິງບາງຢ່າງ. ຖ້າຜູ້ຄົນບໍ່ຮ່ວມມື ຫຼື ປະຕິບັດໂດຍສອດຄ່ອງກັບພຣະທຳຂອງພຣະເຈົ້າໃນປັດຈຸບັນ, ແລ້ວພວກເຂົາກໍກຳລັງຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດ ແລະພວກເຂົາກໍຈະຮູ້ສຶກເຖິງຄວາມກະວົນກະວາຍຢູ່ພາຍໃນຢ່າງແນ່ນອນ. ສົມມຸດວ່າເຈົ້າເຂົ້າໃຈຫຼັກການຂອງດ້ານໃດໜຶ່ງ ແຕ່ເຈົ້າບໍ່ປະຕິບັດຕາມ, ແລ້ວເຈົ້າກໍຈະທົນທຸກກັບຄວາມຮູ້ສຶກແຫ່ງການຕຳນິຕິເຕືອນຢູ່ພາຍໃນ. ຖ້າເຈົ້າບໍ່ເຂົ້າໃຈຫຼັກການ ແລະ ບໍ່ຮູ້ຈັກຄວາມຈິງໃນດ້ານນີ້ເລີຍ, ແລ້ວເຈົ້າຈະບໍ່ຈຳເປັນຕ້ອງຮູ້ສຶກເຖິງການຕຳໜິຕິເຕືອນໃນເລື່ອງນີ້. ການຕຳນິຕິເຕືອນຂອງພຣະວິນຍານບໍລິສຸດຢູ່ໃນບໍລິບົດຢູ່ສະເໝີ. ເຈົ້າຄິດວ່າ ຍ້ອນເຈົ້າບໍ່ໄດ້ອະທິຖານ ແລະ ບໍ່ໄດ້ຮ່ວມມືກັບພາລະກິດຂອງພຣະວິນຍານບໍລິສຸດ ເຈົ້າຈຶ່ງເຮັດໃຫ້ພາລະກິດຊັກຊ້າ. ໃນຄວາມຈິງແລ້ວ ພາລະກິດນັ້ນບໍ່ສາມາດຖືກເຮັດໃຫ້ຊັກຊ້າໄດ້. ພຣະວິນຍານບໍລິສຸດຈະດົນບັນດານຄົນອື່ນອີກ; ບໍ່ມີໃຜຢັບຢັ້ງພາລະກິດຂອງພຣະວິນຍານບໍລິສຸດໄດ້. ເຈົ້າຮູ້ສຶກວ່າເຈົ້າເຮັດໃຫ້ພຣະເຈົ້າເສົ້າໃຈ ແລະ ນີ້ແມ່ນຄວາມຮູ້ສຶກທີ່ເຈົ້າຄວນມີໃນຄວາມສຳນຶກຂອງເຈົ້າ. ບໍ່ວ່າເຈົ້າຈະສາມາດຮັບເອົາຄວາມຈິງ ຫຼື ບໍ່ ກໍບໍ່ແມ່ນທຸລະຂອງເຈົ້າ ແລະບໍ່ກ່ຽວຂ້ອງກັບພຣະເຈົ້າ. ບາງຄັ້ງ ມັນແມ່ນຄວາມສຳນຶກຂອງເຈົ້າເອງທີ່ຮູ້ສຶກວ່າຖືກກ່າວໂທດ, ແຕ່ນີ້ບໍ່ແມ່ນແສງສະຫວ່າງ ຫຼື ແສງເຍືອງທາງຂອງພຣະວິນຍານບໍລິສຸດ ຫຼື ມັນບໍ່ແມ່ນການຕຳນິຕິເຕືອນຂອງພຣະວິນຍານບໍລິສຸດ. ກົງກັນຂ້າມ ມັນແມ່ນຄວາມຮູ້ສຶກທີ່ຢູ່ພາຍໃນຄວາມສຳນຶກຂອງມະນຸດ. ຖ້າເຈົ້າປະຕິບັດຢ່າງຕັ້ງໃຈກ່ຽວກັບເລື່ອງພຣະນາມຂອງພຣະເຈົ້າ, ຄຳພະຍານຂອງພຣະເຈົ້າ ຫຼື ພາລະກິດຂອງພຣະເຈົ້າ, ແລ້ວພຣະເຈົ້າກໍຈະບໍ່ປ່ອຍເຈົ້າໄປ. ແຕ່ວ່າມີຂອບເຂດຈຳກັດ, ພຣະເຈົ້າຈະບໍ່ຫຍຸ້ງກັບເຈົ້າໃນເລື່ອງທຳມະດາ ແລະ ເລັກນ້ອຍ. ພຣະອົງຈະບໍ່ສົນໃຈເຈົ້າ. ຖ້າເຈົ້າລະເມີດຫຼັກການ ແລະ ເຈົ້າທຳລາຍ ແລະ ລົບກວນພາລະກິດຂອງພຣະເຈົ້າ, ພຣະອົງກໍຈະປ່ອຍຄວາມໂກດຮ້າຍຂອງພຣະອົງໃສ່ເຈົ້າ ແລະ ຈະບໍ່ປ່ອຍເຈົ້າໄປຢ່າງແນ່ນອນ. ຄວາມຜິດພາດບາງຢ່າງທີ່ເຈົ້າເຮັດກໍບໍ່ສາມາດຫຼີກເວັ້ນໄດ້

ໃນຊີວິດຂອງມະນຸດ. ຕົວຢ່າງເຊັ່ນ ເຈົ້າໜຶ້ງສາລະເປົາບໍ່ຖືກວິທີ ແລະ ເວົ້າວ່າພຣະເຈົ້າກຳລັງລົງວິໄນເຈົ້າ, ນີ້ແມ່ນສິ່ງທີ່ບໍ່ສົມເຫດສົມຜົນທີ່ສຸດທີ່ຈະເວົ້າ. ກ່ອນທີ່ເຈົ້າມາເຊື່ອໃນພຣະເຈົ້າ, ສິ່ງແບບນີ້ກໍບໍ່ໄດ້ເກີດຂຶ້ນຕະຫຼອດເວລາແມ່ນບໍ? ເຈົ້າຮູ້ສຶກວ່າ ມັນເບິ່ງຄືເປັນການລົງວິໄນຂອງພຣະວິນຍານບໍລິສຸດ, ແຕ່ໃນຄວາມເປັນຈິງ ນີ້ບໍ່ແມ່ນຄວາມຈິງ (ນອກຈາກບາງກໍລະນີທີ່ພິເສດ), ຍ້ອນພາລະກິດນີ້ບໍ່ໄດ້ມາຈາກພຣະວິນຍານບໍລິສຸດທັງໝົດ, ແຕ່ກົງກັນຂ້າມແມ່ນມາຈາກຄວາມຮູ້ສຶກຂອງມະນຸດ. ເຖິງຢ່າງໃດກໍຕາມ, ມັນປົກກະຕິທີ່ຄົນມີຄວາມເຊື່ອຈະຄິດແບບນີ້. ເຈົ້າຈະບໍ່ຄິດແບບນີ້ຖ້າເຈົ້າບໍ່ໄດ້ເຊື່ອໃນພຣະເຈົ້າ. ຫຼັງຈາກທີ່ເຈົ້າມາເຊື່ອໃນພຣະເຈົ້າ, ເຈົ້າກໍເລີ່ມໃຊ້ເວລາຫຼາຍຂຶ້ນໃນການພິຈາລະນາສິ່ງເຫຼົ່ານີ້ ແລະ ສະນັ້ນ ເຈົ້າຈຶ່ງຄິດຕາມສິ່ງເຫຼົ່ານີ້ໂດຍທຳມະຊາດ. ສິ່ງນີ້ເກີດມາຈາກຄວາມຄິດປົກກະຕິຂອງມະນຸດ ແລະ ກ່ຽວຂ້ອງກັບຄວາມຄິດຂອງພວກເຂົາ. ແຕ່ໃຫ້ເຮົາບອກເຈົ້າວ່າ ຄວາມຄິດດັ່ງກ່າວບໍ່ໄດ້ຢູ່ພາຍໃນຂອບເຂດແຫ່ງພາລະກິດຂອງພຣະວິນຍານບໍລິສຸດ. ນີ້ແມ່ນຕົວຢ່າງຂອງການທີ່ພຣະວິນຍານບໍລິສຸດມອບປະຕິກິລິຍາປົກກະຕິຜ່ານທາງຄວາມຄິດຂອງພວກເຂົາ; ແຕ່ເຈົ້າຕ້ອງເຂົ້າໃຈວ່າປະຕິກິລິຍານີ້ບໍ່ແມ່ນພາລະກິດຂອງພຣະວິນຍານບໍລິສຸດ. ການມີ "ຄວາມຮູ້" ແບບນີ້ບໍ່ໄດ້ພິສູດວ່າເຈົ້າມີພາລະກິດຂອງພຣະວິນຍານບໍລິສຸດ. ຄວາມຮູ້ຂອງເຈົ້າບໍ່ໄດ້ເກີດມາຈາກແສງສະຫວ່າງຂອງພຣະວິນຍານບໍລິສຸດ, ແຮງໄກທີ່ມັນຈະເປັນພາລະກິດຂອງພຣະວິນຍານບໍລິສຸດ. ມັນເປັນພຽງຜົນຜະລິດຂອງຄວາມຄິດປົກກະຕິຂອງມະນຸດ ແລະ ມັນບໍ່ມີຈຸດເຊື່ອມໂຍງກັບແສງສະຫວ່າງ ຫຼື ແສງເຍືອງທາງຂອງພຣະວິນຍານບໍລິສຸດຢ່າງແນ່ນອນ, ສິ່ງເຫຼົ່ານີ້ແມ່ນປະກົດການທີ່ແຕກຕ່າງກັນຢ່າງຊັດເຈນ. ຄວາມຄິດດັ່ງກ່າວຂອງມະນຸດປົກກະຕິບໍ່ໄດ້ມາຈາກພຣະວິນຍານບໍລິສຸດທັງສິ້ນ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດເພື່ອສ່ອງແສງສະຫວ່າງໃຫ້ກັບຜູ້ຄົນ, ໂດຍທົ່ວໄປແລ້ວ ພຣະອົງມອບຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ ແລະ ກ່ຽວກັບທາງເຂົ້າທີ່ແທ້ຈິງຂອງພວກເຂົາ ແລະ ສະພາວະທີ່ແທ້ຈິງຂອງພວກເຂົາໃຫ້ກັບພວກເຂົາ. ພຣະອົງຍັງຍອມໃຫ້ພວກເຂົາເຂົ້າໃຈເຖິງເຈດຕະນາອັນຮີບດ່ວນຂອງພຣະເຈົ້າ ແລະ ເງື່ອນໄຂຂອງພຣະອົງສຳລັບມະນຸດໃນປັດຈຸບັນ, ເພື່ອວ່າພວກເຂົາຈະມີຄວາມເດັດດ່ຽວທີ່ຈະເສຍສະຫຼະທຸກຢ່າງເພື່ອເຮັດໃຫ້ພຣະເຈົ້າພໍໃຈ, ຮັກພຣະເຈົ້າ ເຖິງແມ່ນພວກເຂົາຈະພົບກັບການຂົ່ມເຫັງ ແລະ ຄວາມທຸກຍາກ ແລະ ຢືນເປັນພະຍານໃຫ້ກັບພຣະເຈົ້າ ເຖິງແມ່ນມັນໝາຍເຖິງການຫຼັ່ງເລືອດຂອງພວກເຂົາ ຫຼື ການມອບຊີວິດຂອງພວກເຂົາ ແລະ ເຮັດສິ່ງນັ້ນໂດຍບໍ່ເສຍໃຈ. ຖ້າເຈົ້າມີຄວາມເດັດດ່ຽວແບບນີ້, ມັນກໍໝາຍຄວາມວ່າເຈົ້າມີການດົນໃຈ ແລະ ມີພາລະກິດຂອງພຣະວິນຍານບໍລິສຸດ, ແຕ່ໃຫ້ຮູ້ວ່າເຈົ້າບໍ່ໄດ້ມີການດົນໃຈດັ່ງກ່າວໄດ້ທຸກເວລາ. ບາງເທື່ອໃນການປະຊຸມ ເຈົ້າອະທິຖານ ແລະ ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າສາມາຮູ້ສຶກວ່າຖືກດົນບັນດານ ແລະ ດົນໃຈຢ່າງຮຸນແຮງ. ມັນຮູ້ສຶກໃໝ່ ແລະ ສົດໃສຫຼາຍ ເມື່ອຄົນອື່ນແບ່ງປັນການສົນທະນາກ່ຽວກັບປະສົບການຂອງພວກເຂົາ ແລະ ຄວາມເຂົ້າໃຈກ່ຽວກັບພຣະທຳຂອງພຣະເຈົ້າ ແລະ ຫົວໃຈຂອງເຈົ້າກໍຊັດເຈນ ແລະ ສົດໃສແທ້ໆ. ນີ້ແມ່ນພາລະກິດທັງໝົດຂອງພຣະວິນຍານບໍລິສຸດ. ຖ້າເຈົ້າເປັນຜູ້ນຳ ແລະ ພຣະວິນຍານບໍລິສຸດມອບແສງສະຫວ່າງ ແລະ ແສງເຍືອງທາງທີ່ພິເສດໃຫ້ກັບ

ເຈົ້າໃນເວລາທີ່ເຈົ້າລົງໄປໃນຄຣິສຕະຈັກເພື່ອປະຕິບັດພາລະກິດ, ມອບຄວາມເຂົ້າໃຈໃນບັນຫາຕ່າງໆ ທີ່ມີຢູ່ພາຍໃນຄຣິສຕະຈັກໃຫ້ກັບເຈົ້າ, ຍອມໃຫ້ເຈົ້າຮູ້ຈັກວິທີແບ່ງປັນການສົນທະນາກ່ຽວກັບ ຄວາມຈິງເພື່ອແກ້ໄຂສິ່ງເຫຼົ່ານັ້ນ, ເຮັດໃຫ້ເຈົ້າຈິງໃຈ, ຮັບຜິດຊອບ ແລະ ຈິງຈັງໃນພາລະກິດຂອງເຈົ້າ ຢ່າງໜ້າເຊື່ອ, ທຸກສິ່ງເຫຼົ່ານີ້ແມ່ນພາລະກິດຂອງພຣະວິນຍານບໍລິສຸດ.

# ການປະຕິບັດ (2)

ໃນເວລາທີ່ຜ່ານມາ, ຜູ້ຄົນຝຶກຝົນຕົນເອງເພື່ອໃຫ້ຢູ່ກັບພຣະເຈົ້າ ແລະ ດຳລົງຊີວິດພາຍໃນວິນຍານໃນທຸກຊ່ວງເວລາ. ເມື່ອປຽບທຽບກັບການປະຕິບັດໃນປັດຈຸບັນ, ນັ້ນແມ່ນຮູບແບບທຳມະດາຂອງການຝຶກຝົນຝ່າຍວິນຍານ; ມັນແມ່ນວິທີການປະຕິບັດທີ່ຕື້ນທີ່ສຸດ ແລະ ງ່າຍດາຍທີ່ສຸດ ກ່ອນທີ່ຜູ້ຄົນຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນຊີວິດ ແລະ ມັນປະກອບມີຂັ້ນຕອນທຳອິດຂອງການປະຕິບັດໃນຄວາມເຊື່ອຂອງຜູ້ຄົນ. ຖ້າຜູ້ຄົນເພິ່ງພາການປະຕິບັດແບບນີ້ຢູ່ສະເໝີໃນຊີວິດຂອງພວກເຂົາ, ພວກເຂົາຈະມີຄວາມຮູ້ສຶກຫຼາຍຢ່າງ ແລະ ຈະມັກເຮັດຜິດ ແລະ ພວກເຂົາຈະບໍ່ສາມາດເຂົ້າສູ່ປະສົບການໃນຊີວິດທີ່ແທ້ຈິງໄດ້; ພວກເຂົາຈະພຽງແຕ່ສາມາດຝຶກຝົນວິນຍານຂອງພວກເຂົາ, ຫຍັບເຂົ້າໃກ້ພຣະເຈົ້າໃນຫົວໃຈຂອງພວກເຂົາຢ່າງເປັນປົກກະຕິ ແລະ ຈະຄົ້ນພົບຄວາມປິຕິຍິນດີຢ່າງຫຼວງຫຼາຍໃນການມີພຣະເຈົ້າຢູ່ກັບພວກເຂົາ. ພວກເຂົາຈະຈຳກັດຕົນເອງໃນຂອບເຂດນ້ອຍໆຂອງການທີ່ພວກເຂົາຢູ່ຮ່ວມກັບພຣະເຈົ້າ ແລະ ຈະບໍ່ສາມາດເຂົ້າຫາສິ່ງໃດສິ່ງໜຶ່ງຢ່າງເລິກເຊິ່ງໄດ້. ຜູ້ຄົນທີ່ດຳລົງຊີວິດຢູ່ພາຍໃນຂອບເຂດເຫຼົ່ານີ້ແມ່ນບໍ່ສາມາດຄືບໜ້າໄດ້ເລີຍ. ໃນເວລາໃດກໍຕາມ, ພວກເຂົາອາດຈະຮ້ອງຂຶ້ນວ່າ "ໂອ້ຍ! ພຣະເຢຊູເຈົ້າ. ອາແມນ!" ໃນແຕ່ລະມື້ ພວກເຂົາເປັນແບບນີ້ແທ້ໆ, ມັນຄືການປະຕິບັດໃນອະດີດ, ການປະຕິບັດແຫ່ງການດຳລົງຊີວິດຢູ່ໃນວິນຍານທຸກຊ່ວງເວລາ. ມັນບໍ່ທຳມະດາບໍ? ໃນປັດຈຸບັນ, ເມື່ອມັນເຖິງເວລາທີ່ຈະໄຕ່ຕອງພຣະທຳຂອງພຣະເຈົ້າ, ກໍໃຫ້ໃສ່ໃຈກັບການໄຕ່ຕອງພຣະທຳຂອງພຣະເຈົ້າເທົ່ານັ້ນ; ເມື່ອມັນເຖິງເວລາທີ່ຈະນຳຄວາມຈິງເຂົ້າສູ່ການປະຕິບັດ, ກໍໃຫ້ໃສ່ໃຈກັບການນຳຄວາມຈິງເຂົ້າສູ່ການປະຕິບັດເທົ່ານັ້ນ; ເມື່ອມັນເຖິງເວລາທີ່ຈະປະຕິບັດໜ້າທີ່ຂອງເຈົ້າ, ກໍໃຫ້ໃສ່ໃຈກັບການປະຕິບັດໜ້າທີ່ຂອງເຈົ້າເທົ່ານັ້ນ. ການປະຕິບັດແບບນີ້ແມ່ນເປັນອິດສະຫຼະພໍສົມຄວນ; ມັນປົດປ່ອຍເຈົ້າ. ມັນບໍ່ແມ່ນຄືກັບວິທີທີ່ຜູ້ເຖົ້າທີ່ເຄັ່ງສາສະໜາອະທິຖານ ແລະ ກ່າວຄຳອະທິຖານສັ້ນໆ. ແນ່ນອນ ເມື່ອກ່ອນ ສິ່ງນີ້ເປັນການປະຕິບັດຂອງຜູ້ຄົນທີ່ມີຄວາມເຊື່ອ, ແຕ່ໃນປັດຈຸບັນ ການປະຕິບັດໃນລັກສະນະນີ້ເປັນສິ່ງທີ່ຫຼ້າຫຼັງເກີນໄປ. ບັດນີ້ ພາລະກິດຂອງພຣະເຈົ້າຢູ່ໃນລະດັບສູງ; ສິ່ງທີ່ຖືກເວົ້າເຖິງໃນປັດຈຸບັນ "ການນຳພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງ" ແມ່ນລັກສະນະທີ່ສຳຄັນທີ່ສຸດຂອງການປະຕິບັດ. ນີ້ແມ່ນຄວາມເປັນມະນຸດປົກກະຕິທີ່ຜູ້ຄົນຖືກຄາດຫວັງໃຫ້ມີໃນຊີວິດຈິງຂອງພວກເຂົາ ແລະ ສິ່ງທີ່ຜູ້ຄົນຄວນມີໃນຄວາມເປັນມະນຸດທີ່ປົກກະຕິຂອງພວກເຂົາກໍລ້ວນແລ້ວແຕ່ແມ່ນພຣະທຳທີ່ພຣະເຈົ້າກ່າວໃນປັດຈຸບັນ. ການນຳພຣະທຳເຫຼົ່ານີ້ຂອງພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງແມ່ນຄວາມໝາຍຕົວຈິງຂອງ "ການນຳພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງ". ໃນປັດຈຸບັນ, ຜູ້ຄົນຄວນປະກອບຕົນເອງດ້ວຍສິ່ງດັ່ງຕໍ່ໄປນີ້ເປັນຫຼັກ: ໃນດ້ານໜຶ່ງ, ພວກເຂົາຕ້ອງປັບປຸງຄວາມສາມາດຂອງພວກເຂົາ, ມີການສຶກສາ ແລະ ປັບປຸງທັກສະການອ່ານ ແລະ ການເຂົ້າໃຈຂອງພວກເຂົາ; ໃນອີກດ້ານໜຶ່ງ, ພວກເຂົາຕ້ອງມີຊີວິດຂອງບຸກຄົນທີ່ປົກກະຕິ. ເຈົ້າຫາກໍມາຈາກໂລກເພື່ອຢູ່ຕໍ່ໜ້າພຣະເຈົ້າ; ເຈົ້າຕ້ອງຝຶກຝົນຫົວໃຈຂອງເຈົ້າໃຫ້ສະຫງົບງຽບຢູ່ຕໍ່ໜ້າພຣະເຈົ້າ. ນີ້ແມ່ນການເລີ່ມຕົ້ນທີ່ສຸດຂອງ

ການປະຕິບັດ ແລະ ມັນຍັງເປັນບາດກ້າວທຳອິດໃນການບັນລຸການປ່ຽນແປງໃນຊີວິດ-ອຸປະນິໄສຂອງເຈົ້າ. ບາງຄົນຂ້ອນຂ້າງປັບຕົວໃນການປະຕິບັດຂອງພວກເຂົາໄດ້ດີ; ພວກເຂົາໄຕ່ຕອງຄວາມຈິງ ໃນຂະນະທີ່ເຮັດວຽກ, ຄົ້ນຫາຄວາມຈິງ ແລະ ຫຼັກການແຫ່ງການປະຕິບັດທີ່ພວກເຂົາຄວນເຂົ້າໃຈໃນຄວາມເປັນຈິງ. ດ້ານໜຶ່ງກໍຄື ເຈົ້າຕ້ອງມີຊີວິດມະນຸດທີ່ປົກກະຕິ ແລະ ອີກດ້ານກໍຄື ຕ້ອງມີການເຂົ້າສູ່ຄວາມຈິງ. ທຸກສິ່ງເຫຼົ່ານີ້ປະກອບເປັນການປະຕິບັດທີ່ດີທີ່ສຸດສຳລັບຊີວິດທີ່ເປັນຈິງ.

ການນຳພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງຂອງຜູ້ຄົນ ຫຼັກໆແມ່ນຮຽກຮ້ອງໃຫ້ພວກເຂົານະມັດສະການພຣະເຈົ້າ, ສະແຫວງຫາເພື່ອຮູ້ຈັກພຣະເຈົ້າ ແລະ ປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າພາຍໃນຄວາມເປັນມະນຸດທີ່ເປັນປົກກະຕິ. ມັນບໍ່ແມ່ນວ່າພວກເຂົາຕ້ອງອະທິຖານຫາພຣະເຈົ້າທຸກຄັ້ງທີ່ພວກເຂົາເຮັດບາງສິ່ງບາງຢ່າງແນ່ນອນ, ບໍ່ແມ່ນວ່າມັນບໍ່ດີ ແລະ ພວກເຂົາຄວນຮູ້ສຶກວ່າ ຕິດໜີ້ບຸນຄຸນພຣະອົງ ຖ້າພວກເຂົາບໍ່ອະທິຖານ. ການປະຕິບັດໃນປັດຈຸບັນບໍ່ແມ່ນແບບນັ້ນ; ມັນສະບາຍ ແລະ ງ່າຍດາຍແທ້ໆ! ມັນບໍ່ໄດ້ຮຽກຮ້ອງໃຫ້ຜູ້ຄົນປະຕິບັດຕາມຄຳສັ່ງສອນ. ກົງກັນຂ້າມ, ແຕ່ລະຄົນຄວນປະພຶດຕາມວຸດທິພາວະສ່ວນຕົວຂອງພວກເຂົາ: ຖ້າສະມາຊິກໃນຄອບຄົວຂອງເຈົ້າບໍ່ເຊື່ອໃນພຣະເຈົ້າ ກໍປະຕິບັດຕໍ່ພວກເຂົາແບບຄົນບໍ່ເຊື່ອ ແລະ ຖ້າເຂົາເຊື່ອ ກໍປະຕິບັດຕໍ່ຄົນແບບຄົນທີ່ເຊື່ອ. ຢ່ານຳໃຊ້ຄວາມຮັກ ແລະ ຄວາມອົດທົນ, ກົງກັນຂ້າມ ໃຫ້ນຳໃຊ້ສະຕິປັນຍາ. ບາງຄົນໄປຊື້ຜັກ ແລະ ໃນຂະນະທີ່ພວກເຂົາກຳລັງຍ່າງໄປ ພວກເຂົາຈົ່ມພຶມພຳວ່າ “ໂອ ພຣະເຈົ້າເອີຍ! ພຣະອົງຈະໃຫ້ຂ້ານ້ອຍຊື້ຜັກຫຍັງໃນມື້ນີ້? ຂ້ານ້ອຍຂໍຄວາມຊ່ວຍເຫຼືອຈາກພຣະອົງ. ພຣະເຈົ້າຮຽກຮ້ອງໃຫ້ພວກຂ້ານ້ອຍຖວາຍກຽດແກ່ພຣະນາມຂອງພຣະອົງໃນທຸກສິ່ງ ແລະ ໃຫ້ພວກຂ້ານ້ອຍທຸກຄົນເປັນພະຍານ, ສະນັ້ນ ເຖິງແມ່ນຄົນຂາຍເອົາບາງສິ່ງທີ່ເນົ່າໃຫ້ກັບຂ້ານ້ອຍ, ຂ້ານ້ອຍກໍຍັງຈະຂອບພຣະຄຸນພຣະເຈົ້າ, ຂ້ານ້ອຍຈະອົດທົນ. ພວກຂ້ານ້ອຍທີ່ເຊື່ອໃນພຣະເຈົ້າບໍ່ສາມາດເອົາ ແລະ ເລືອກຜັກໄດ້”. ພວກເຂົາຄິດວ່າການເຮັດແບບນີ້ແມ່ນການເປັນພະຍານ ແລະ ຜົນຕາມມາກໍຄື ພວກເຂົາໃຊ້ເງິນເພື່ອຊື້ຜັກຈຳພວກທີ່ເນົ່າ, ແຕ່ພວກເຂົາຍັງອະທິຖານ ແລະ ເວົ້າວ່າ “ໂອ ພຣະເຈົ້າເອີຍ! ຂ້ານ້ອຍຍັງຈະກິນຜັກທີ່ເນົ່າເຫຼົ່ານີ້ຕາບໃດທີ່ພຣະອົງຄິດວ່າມັນເໝາະສົມ”. ການປະຕິບັດດັ່ງກ່າວສົມເຫດສົມຜົນບໍ? ມັນບໍ່ແມ່ນການປະຕິບັດຕາມຄຳສັ່ງສອນບໍ? ເມື່ອກ່ອນ ຜູ້ຄົນຖືກຝຶກຝົນໃຫ້ດຳລົງຊີວິດໃນວິນຍານທຸກເວລາ, ສິ່ງນີ້ແມ່ນກ່ຽວພັນກັບພາລະກິດທີ່ປະຕິບັດຜ່ານມາໃນຍຸກແຫ່ງພຣະຄຸນ. ຄວາມເຄັ່ງຄັດໃນສາສະໜາ, ຄວາມຖ່ອມຕົນ, ຄວາມຮັກ, ຄວາມອົດທົນ, ການຂອບຄຸນສຳລັບທຸກສິ່ງ, ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຮຽກຮ້ອງຈາກຜູ້ເຊື່ອທຸກຄົນໃນຍຸກແຫ່ງພຣະຄຸນ. ໃນເວລານັ້ນ ຜູ້ຄົນອະທິຖານຫາພຣະເຈົ້າໃນທຸກໆສິ່ງ; ພວກເຂົາຈະອະທິຖານເມື່ອພວກເຂົາຊື້ເຄື່ອງນຸ່ງ ແລະ ເມື່ອໄດ້ຮັບແຈ້ງເຕືອນກ່ຽວກັບການຊຸມນຸມ, ພວກເຂົາກໍຈະຍັງອະທິຖານວ່າ “ໂອ ພຣະເຈົ້າເອີຍ! ພຣະອົງຈະໃຫ້ຂ້ານ້ອຍໄປ ຫຼື ບໍ່? ຖ້າພຣະອົງຈະໃຫ້ຂ້ານ້ອຍໄປ, ແລ້ວຂໍໃຫ້ຈັດກຽມເສັ້ນທາງທີ່ລາບລື່ນໃຫ້ກັບຂ້ານ້ອຍດ້ວຍເທີ້ນ. ຖ້າພຣະອົງບໍ່ໃຫ້ຂ້ານ້ອຍໄປ, ຂໍໃຫ້ພຣະອົງເຮັດໃຫ້ຂ້ານ້ອຍສະດຸດ ແລະ ລົ້ມລົງ”. ພວກເຂົາຈະອ້ອນວອນຫາພຣະເຈົ້າໃນຂະນະທີ່ກຳລັງອະທິຖານ ແລະ ຫຼັງຈາກທີ່ອະທິຖານ ພວກເຂົາກໍຈະຮູ້ສຶກ

ອຶດອັດ ແລະ ຈະບໍ່ຈາກໄປ. ເອື້ອຍນ້ອງບາງຄົນຈະຮູ້ສຶກອຶດອັດເມື່ອພວກເຂົາອະທິຖານ ແລະ ຈະບໍ່ໄປຮ່ວມການຊຸມນຸມ ຍ້ອນຢ້ານວ່າ ຫຼັງຈາກທີ່ກັບຈາກການຊຸມນຸມມາເຮືອນ ພວກເຂົາອາດທົນທຸກກັບການຕີຈາກສາມີທີ່ບໍ່ໄດ້ເຊື່ອຂອງພວກເຂົາ. ພວກເຂົາເຊື່ອວ່າສິ່ງນີ້ແມ່ນຄວາມປະສົງຂອງພຣະເຈົ້າ, ເມື່ອໃນຄວາມເປັນຈິງແລ້ວ ຖ້າພວກເຂົາໄປ ມັນກໍບໍ່ໄດ້ມີຫຍັງເກີດຂຶ້ນ. ຜົນຕາມມາກໍຄືພວກເຂົາຂາດການຊຸມນຸມ. ທຸກສິ່ງນີ້ແມ່ນຜົນມາຈາກຄວາມບໍ່ຮູ້ຂອງຜູ້ຄົນ. ຜູ້ຄົນທີ່ປະຕິບັດໃນລັກສະນະນີ້ລ້ວນແລ້ວແຕ່ດຳລົງຊີວິດດ້ວຍຄວາມຮູ້ສຶກຂອງພວກເຂົາເອງ. ຫົນທາງແຫ່ງການປະຕິບັດນີ້ແມ່ນຜິດພາດຫຼາຍ ແລະ ບໍ່ສົມເຫດສົມຜົນ ແລະ ເຕັມໄປດ້ວຍຄວາມບໍ່ຊັດເຈນ. ມີຄວາມຮູ້ສຶກ ແລະ ຄວາມຄິດສ່ວນຕົວຂອງພວກເຂົາຫຼາຍເກີນໄປ. ຖ້າເຈົ້າຖືກແຈ້ງໃຫ້ຮູ້ກ່ຽວກັບການຊຸມນຸມ, ແລ້ວໃຫ້ໄປ; ບໍ່ຈຳເປັນຕ້ອງອະທິຖານຫາພຣະເຈົ້າເພີ່ມອີກ. ສິ່ງນີ້ບໍ່ແມ່ນເລື່ອງງ່າຍໆບໍ? ຖ້າເຈົ້າຕ້ອງການຊື້ເຄື່ອງນຸ່ງໃນມື້ນີ້, ແລ້ວໃຫ້ອອກໄປ ແລະ ຊື້ເລີຍ. ຢ່າອະທິຖານຫາພຣະເຈົ້າ ແລະ ເວົ້າວ່າ “ໂອ ພຣະເຈົ້າເອີຍ! ພຣະອົງຈະໃຫ້ຂ້ານ້ອຍໄປ ຫຼື ບໍ່ໄປ? ຖ້າອ້າຍເອື້ອຍນ້ອງຄົນໜຶ່ງບັງເອີນມາຫາຕອນທີ່ຂ້ານ້ອຍໄປເດ?” ເຈົ້າຢ້ານວ່າອ້າຍ ຫຼື ເອື້ອຍນ້ອງອາດຈະມາຫາ ສະນັ້ນ ເຈົ້າຈຶ່ງບໍ່ໄປ, ແຕ່ຜົນຕາມມາກໍຄືຈົນຮອດຍາມແລງ ແລະ ບໍ່ມີໃຜມາ. ແມ່ນແຕ່ໃນຍຸກແຫ່ງພຣະຄຸນ, ວິທີການປະຕິບັດແບບນີ້ແມ່ນອອກຈາກທິດທາງ ແລະ ຜິດພາດ. ສະນັ້ນ ຖ້າຜູ້ຄົນປະຕິບັດດັ່ງໃນອະດີດ, ຈະບໍ່ມີການປ່ຽນແປງໃນຊີວິດຂອງພວກເຂົາ. ພວກເຂົາພຽງແຕ່ຈະຍອມຮັບເອົາສິ່ງໃດກໍຕາມທີ່ເກີດຂຶ້ນກັບພວກເຂົາຢ່າງໂງ່ຈ້າ, ຈະບໍ່ໃສ່ໃຈຕໍ່ການຢັ່ງຮູ້ ແລະ ຈະບໍ່ເຮັດຫຍັງນອກຈາກເຊື່ອຟັງ ແລະ ອົດທົນຢ່າງຫຼັບຫູຫຼັບຕາ. ໃນເວລານັ້ນ, ຜູ້ຄົນຈະເລັ່ງໃສ່ການຖວາຍກຽດໃຫ້ແກ່ພຣະເຈົ້າ, ແຕ່ພຣະເຈົ້າຈະບໍ່ໄດ້ຮັບສະຫງ່າລາສີຈາກພວກເຂົາເລີຍ, ຍ້ອນພວກເຂົາບໍ່ໄດ້ດຳລົງຊີວິດຕາມສິ່ງທີ່ເປັນຈິງ. ພວກເຂົາພຽງແຕ່ຢັບຢັ້ງຕົນເອງ ແລະ ຈຳກັດຕົນເອງຕາມແນວຄິດສ່ວນຕົວຂອງພວກເຂົາ ແລະ ເຖິງແມ່ນການປະຕິບັດເປັນເວລາຫຼາຍປີກໍບໍ່ສາມາດນຳການປ່ຽນແປງມາສູ່ຊີວິດຂອງພວກເຂົາໄດ້. ພວກເຂົາພຽງແຕ່ຮູ້ຈັກການອົດທົນ, ການຖ່ອມຕົນ, ການຮັກ ແລະ ການໃຫ້ອະໄພ, ແຕ່ບໍ່ມີແສງສະຫວ່າງແມ່ນແຕ່ໜ້ອຍດຽວຈາກພຣະວິນຍານບໍລິສຸດ. ຜູ້ຄົນຈະສາມາດຮູ້ຈັກພຣະເຈົ້າໃນລັກສະນະນັ້ນໄດ້ແນວໃດ? ແລ້ວພວກເຂົາຈະຖວາຍກຽດແກ່ພຣະເຈົ້າໄດ້ແນວໃດ?

ຜູ້ຄົນພຽງແຕ່ສາມາດເຂົ້າສູ່ເສັ້ນທາງທີ່ຖືກຕ້ອງຂອງຄວາມເຊື່ອໃນພຣະເຈົ້າໄດ້ ຖ້າພວກເຂົານຳພຣະເຈົ້າເຂົ້າສູ່ຊີວິດທີ່ແທ້ຈິງຂອງພວກເຂົາ ແລະ ເຂົ້າສູ່ຊີວິດມະນຸດທີ່ປົກກະຕິຂອງພວກເຂົາ. ພຣະທຳຂອງພຣະເຈົ້າຊີ້ນຳພວກເຈົ້າໃນປັດຈຸບັນ; ບໍ່ຈຳເປັນຕ້ອງສະແຫວງຫາ ແລະ ງົມຫາຄືຢູ່ໃນອະດີດ. ເມື່ອເຈົ້າສາມາດປະຕິບັດຕາມພຣະທຳຂອງພຣະເຈົ້າ ແລະ ສາມາດວິເຄາະ ແລະ ວັດຕົນເອງຕາມສະພາວະມະນຸດທີ່ເຮົາໄດ້ເປີດເຜີຍ, ແລ້ວເຈົ້າກໍຈະສາມາດບັນລຸການປ່ຽນແປງໄດ້. ນີ້ບໍ່ແມ່ນຄຳສັ່ງສອນ, ແຕ່ເປັນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ. ໃນປັດຈຸບັນ ໃຫ້ເຮົາບອກເຈົ້າວ່າສິ່ງຕ່າງໆເປັນແນວໃດ: ໃຫ້ໃສ່ໃຈຕົນເອງແຕ່ກັບການປະຕິບັດຕາມພຣະທຳຂອງເຮົາ. ສິ່ງທີ່ເຮົາຮຽກຮ້ອງຈາກເຈົ້າແມ່ນອີງຕາມຄວາມຕ້ອງການຂອງຄົນປົກກະຕິ. ເຮົາໄດ້ບອກພຣະທຳຂອງເຮົາໃຫ້ກັບເຈົ້າແລ້ວ; ຕາບໃດທີ່ເຈົ້າ

ໃສ່ໃຈກັບການປະຕິບັດພຣະທຳເຫຼົ່ານັ້ນ, ເຈົ້າກໍຈະສອດຄ່ອງກັບເຈດຕະນາຂອງພຣະເຈົ້າ. ບັດນີ້ເປັນເວລາແຫ່ງການດຳລົງຊີວິດຢູ່ພາຍໃນພຣະທຳຂອງພຣະເຈົ້າແລ້ວ. ພຣະທຳຂອງພຣະເຈົ້າໄດ້ອະທິບາຍທຸກຢ່າງແລ້ວ, ທຸກສິ່ງຖືກເຮັດໃຫ້ຊັດເຈນ ແລະ ຕາບໃດທີ່ເຈົ້າດຳລົງຊີວິດໂດຍພຣະທຳຂອງພຣະເຈົ້າ, ເຈົ້າຈະມີຊີວິດທີ່ເປັນອິດສະຫຼະ ແລະ ຖືກປົດປ່ອຍຢ່າງສົມບູນ. ໃນອະດີດ ເມື່ອຜູ້ຄົນນຳພຣະເຈົ້າເຂົ້າສູ່ຊີວິດທີ່ເປັນຈິງຂອງພວກເຂົາ, ພວກເຂົາກໍປະຕິບັດ ແລະ ຜ່ານຄຳສັ່ງສອນ ແລະ ພິທີກຳຢ່າງຫຼວງຫຼາຍ; ໃນແມ່ນແຕ່ເລື່ອງທີ່ເລັກນ້ອຍ, ພວກເຂົາກໍຈະອະທິຖານ ແລະ ສະແຫວງຫາ ໂດຍປະຖິ້ມພຣະທຳທີ່ລະບຸໄວ້ຢ່າງຊັດເຈນຂອງພຣະເຈົ້າ ແລະ ປະຕິເສດທີ່ຈະອ່ານພຣະທຳເຫຼົ່ານັ້ນ. ກົງກັນຂ້າມ ພວກເຂົາຈະອຸທິດຄວາມພະຍາຍາມທັງໝົດຂອງພວກເຂົາເຂົ້າໃນການສະແຫວງຫາ, ຜົນຕາມມາກໍຄື ບໍ່ມີປະສິດທິພາບ. ຍົກຕົວຢ່າງຄືເລື່ອງອາຫານ ແລະ ເຄື່ອງນຸ່ງ: ເຈົ້າອະທິຖານ ແລະ ວາງບັນຫາເຫຼົ່ານີ້ຢູ່ໃນມືຂອງພຣະເຈົ້າ, ຂໍໃຫ້ພຣະເຈົ້າແກ້ໄຂທຸກສິ່ງໃຫ້ກັບເຈົ້າ. ເມື່ອພຣະເຈົ້າໄດ້ຍິນຄຳເວົ້າເຫຼົ່ານີ້, ພຣະອົງຈະກ່າວວ່າ "ເຮົາຈຳເປັນຕ້ອງໃສ່ໃຈຕົນເອງກັບລາຍລະອຽດທີ່ບໍ່ສຳຄັນແບບນີ້ບໍ? ຄວາມເປັນມະນຸດ ແລະ ເຫດຜົນທີ່ທຳມະດາທີ່ເຮົາໄດ້ສ້າງໃຫ້ເຈົ້ານັ້ນຫາຍໄປໃສແລ້ວ?" ບາງເທື່ອ ບາງຄົນເຮັດຜິດໃນການກະທຳຂອງພວກເຂົາ; ແລ້ວພວກເຂົາກໍເຊື່ອວ່າພວກເຂົາໄດ້ລ່ວງເກີນພຣະເຈົ້າ ແລະ ພວກເຂົາກໍຖືກຍັບຍັ້ງ. ສະພາບຂອງບາງຄົນແມ່ນດີຫຼາຍ, ແຕ່ເມື່ອພວກເຂົາເຮັດບາງສິ່ງເລັກນ້ອຍທີ່ບໍ່ຖືກຕ້ອງ ພວກເຂົາກໍເຊື່ອວ່າ ພຣະເຈົ້າກຳລັງຂ້ຽນຕີພວກເຂົາ. ໃນຄວາມເປັນຈິງແລ້ວ, ນີ້ບໍ່ແມ່ນການກະທຳຂອງພຣະເຈົ້າ, ແຕ່ເປັນອິດທິພົນຈາກຄວາມຄິດຂອງຜູ້ຄົນເອງ. ບາງຄັ້ງ ບໍ່ມີຫຍັງຜິດກັບສິ່ງທີ່ເຈົ້າກຳລັງຜະເຊີນ, ແຕ່ຄົນອື່ນເວົ້າວ່າເຈົ້າບໍ່ໄດ້ຜະເຊີນຢ່າງຖືກຕ້ອງ ແລະ ແລ້ວເຈົ້າກໍຕິດກັບດັກ, ເຈົ້າເລີ່ມຄິດລົບ ແລະ ມືດມົນຢູ່ພາຍໃນ. ຫຼາຍຄັ້ງທີ່ຜູ້ຄົນຄິດລົບໃນລັກສະນະນີ້, ພວກເຂົາກໍເຊື່ອວ່າພວກເຂົາກຳລັງຖືກຂ້ຽນຕີໂດຍພຣະເຈົ້າ, ແຕ່ພຣະເຈົ້າເວົ້າວ່າ "ເຮົາບໍ່ໄດ້ປະຕິບັດພາລະກິດແຫ່ງການຂ້ຽນຕີໃນຕົວເຈົ້າ; ສະນັ້ນ ເຈົ້າຈະໂທດເຮົາໄດ້ແນວໃດ?" ຜູ້ຄົນເລີ່ມຄິດລົບແບບງ່າຍໆເກີນໄປ. ພ້ອມນັ້ນພວກເຂົາຍັງອ່ອນໄຫວເກີນໄປຢູ່ເລື້ອຍໆ ແລະ ຕໍ່ວ່າກັບພຣະເຈົ້າຢູ່ຕະຫຼອດເວລາ. ພຣະເຈົ້າບໍ່ຕ້ອງການໃຫ້ເຈົ້າທົນທຸກໃນລັກສະນະນັ້ນ, ແຕ່ເຈົ້າກໍຍອມໃຫ້ຕົນເອງຕົກລົງສູ່ສະພາບດັ່ງກ່າວ. ບໍ່ມີຄຸນຄ່າຫຍັງເລີຍໃນການທົນທຸກແບບນັ້ນ. ຜູ້ຄົນບໍ່ຮູ້ຈັກພາລະກິດທີ່ພຣະເຈົ້າປະຕິບັດ ແລະ ໃນຫຼາຍສິ່ງ ພວກເຂົາກໍບໍ່ຮູ້ ແລະ ບໍ່ສາມາດເຫັນໄດ້ຢ່າງຊັດເຈນ, ສະນັ້ນ ພວກເຂົາຈຶ່ງຕິດຢູ່ກັບແນວຄິດ ແລະ ຈິນຕະນາການຂອງພວກເຂົາເອງ ແລະ ຍິ່ງຫຍຸ້ງຍາກຫຼາຍຂຶ້ນກວ່າເກົ່າ. ບາງຄົນເວົ້າວ່າທຸກສິ່ງ ແລະ ບັນຫາທຸກຢ່າງແມ່ນຢູ່ໃນມືຂອງພຣະເຈົ້າ, ແລ້ວພຣະເຈົ້າຈະບໍ່ຮູ້ໄດ້ແນວໃດເມື່ອຜູ້ຄົນຄິດລົບ? ແນ່ນອນ ພຣະເຈົ້າຮູ້. ເມື່ອເຈົ້າຕິດກັບດັກໃນແນວຄິດຂອງມະນຸດ, ພຣະວິນຍານບໍລິສຸດກໍບໍ່ມີທາງປະຕິບັດພາລະກິດໃນຕົວເຈົ້າໄດ້. ມີຫຼາຍຄັ້ງທີ່ບາງຄົນຕິດກັບດັກໃນສະພາວະດ້ານລົບ, ແຕ່ເຮົາກໍຍັງສືບຕໍ່ປະຕິບັດພາລະກິດຂອງເຮົາ. ບໍ່ວ່າເຈົ້າຈະຄິດລົບ ຫຼື ບວກ, ເຮົາບໍ່ໄດ້ຖືກຈຳກັດໂດຍເຈົ້າ, ແຕ່ເຈົ້າຄວນຮູ້ວ່າ ພຣະທຳຫຼາຍຂໍ້ທີ່ເຮົາກ່າວ ແລະ ພາລະກິດຈຳນວນຫຼວງຫຼາຍທີ່ເຮົາປະຕິບັດ ແມ່ນເຊື່ອມໂຍງກັນຢ່າງໃກ້ຊິດຕາມສະພາວະຂອງຜູ້ຄົນ. ເມື່ອເຈົ້າຄິດລົບ, ສິ່ງນີ້ກໍບໍ່ໄດ້ຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດ.

ໃນລະຫວ່າງເວລາແຫ່ງການຂ້ຽນຕີ ແລະ ເວລາຂອງການທົດລອງແຫ່ງຄວາມຕາຍ, ທຸກຄົນຕົກກັບດັກໃນສະພາວະດ້ານລົບ, ແຕ່ສິ່ງນີ້ກໍບໍ່ໄດ້ຂັດຂວາງພາລະກິດຂອງເຮົາ. ເມື່ອເຈົ້າຄິດລົບ, ພຣະວິນຍານບໍລິສຸດກໍສືບຕໍ່ປະຕິບັດສິ່ງທີ່ຈໍາເປັນຕ້ອງເຮັດໃນຄົນອື່ນ. ເຈົ້າອາດເຊົາສະແຫວງຫາເປັນເວລາໜຶ່ງເດືອນ, ແຕ່ເຮົາກໍສືບຕໍ່ປະຕິບັດພາລະກິດຂອງເຮົາ, ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມໃນປັດຈຸບັນ ແລະ ໃນອະນາຄົດ, ມັນກໍບໍ່ສາມາດຢຸດພາລະກິດຂອງພຣະວິນຍານບໍລິສຸດໄດ້. ສະພາວະດ້ານລົບບາງຢ່າງມາຈາກຄວາມອ່ອນແອຂອງມະນຸດ; ເມື່ອຜູ້ຄົນເຊື່ອວ່າພວກເຂົາບໍ່ສາມາດບັນລຸຕາມເງື່ອນໄຂຂອງພຣະເຈົ້າ ຫຼື ເຂົ້າໃຈສິ່ງເຫຼົ່ານັ້ນໄດ້ຢ່າງແທ້ຈິງ, ພວກເຂົາກໍເລີ່ມຄິດລົບ. ຕົວຢ່າງເຊັ່ນ ໃນລະຫວ່າງເວລາແຫ່ງການຂ້ຽນຕີ, ພຣະທໍາຂອງພຣະເຈົ້າເວົ້າເຖິງການຮັກພຣະເຈົ້າຈົນເຖິງຈຸດໃດໜຶ່ງໃນທ່າມກາງການຂ້ຽນຕີ, ແຕ່ຜູ້ຄົນເຊື່ອວ່າພວກເຂົາເອງບໍ່ສາມາດເຮັດໄດ້. ພວກເຂົາຮູ້ສຶກໂສກເສົ້າ ແລະ ເສຍໃຈເປັນພິເສດ ຈົນເນື້ອໜັງຂອງພວກເຂົາເລີ່ມຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງໜັກໜ່ວງ ແລະ ຄວາມສາມາດຂອງພວກເຂົາແມ່ນຕົກຕໍ່າຫຼາຍ. ພວກເຂົາຮູ້ສຶກວ່າ ມັນຊ່າງເປັນຕາເສຍດາຍທີ່ພວກເຂົາເກີດໃນສະພາບແວດລ້ອມແບບນີ້. ແລ້ວບາງຄົນກໍຮູ້ສຶກວ່າ ມັນຊ້າເກີນໄປສໍາລັບພວກເຂົາທີ່ຈະເຊື່ອໃນພຣະເຈົ້າ ແລະ ຮູ້ຈັກພຣະເຈົ້າ ແລະ ພວກເຂົາບໍ່ສົມຄວນແກ່ການຖືກເຮັດໃຫ້ສົມບູນ. ທຸກສິ່ງເຫຼົ່ານີ້ແມ່ນສະພາວະທີ່ປົກກະຕິຂອງມະນຸດ.

ເນື້ອໜັງຂອງມະນຸດແມ່ນມາຈາກຊາຕານ, ມັນເຕັມໄປດ້ວຍນິໄສກະບົດ, ມັນເປິເປື້ອນຢ່າງໜ້າເວດທະນາ ແລະ ມັນເປັນສິ່ງທີ່ບໍ່ບໍລິສຸດ. ຜູ້ຄົນຢາກໄດ້ຄວາມສຸກທາງຝ່າຍເນື້ອໜັງຫຼາຍເກີນໄປ ແລະ ສະແດງອອກເຖິງເນື້ອໜັງຫຼາຍເກີນໄປ; ນີ້ຄືເຫດຜົນທີ່ວ່າເປັນຫຍັງພຣະເຈົ້າຈຶ່ງກຽດຊັງເນື້ອໜັງຂອງມະນຸດຈົນເຖິງລະດັບໃດໜຶ່ງ. ເມື່ອຜູ້ຄົນປະຖິ້ມສິ່ງຕ່າງໆທີ່ສົກກະປົກ ແລະ ເສື່ອມຊາມຂອງຊາຕານ, ພວກເຂົາກໍໄດ້ຮັບເອົາຄວາມລອດພົ້ນຂອງພຣະເຈົ້າ. ແຕ່ຖ້າພວກເຂົາຍັງບໍ່ກໍາຈັດຕົນເອງຈາກຄວາມສົກກະປົກ ແລະ ຄວາມເສື່ອມຊາມ, ແລ້ວພວກເຂົາກໍຍັງດໍາລົງຊີວິດພາຍໃຕ້ອໍານາດຂອງຊາຕານ. ເລ່ລ່ຽມ, ຄວາມຫຼອກລວງ ແລະ ຄວາມບໍ່ຊື່ສັດຂອງຜູ້ຄົນເປັນທຸກສິ່ງຂອງຊາຕານ. ການທີ່ພຣະເຈົ້າຊ່ວຍເຈົ້າໃຫ້ລອດພົ້ນຄືການເຮັດໃຫ້ເຈົ້າເປັນອິດສະຫຼະຈາກສິ່ງເຫຼົ່ານີ້ຂອງຊາຕານ. ພາລະກິດຂອງພຣະເຈົ້າບໍ່ສາມາດຜິດພາດໄດ້; ມັນລ້ວນແລ້ວແຕ່ຖືກປະຕິບັດເພື່ອຊ່ວຍຜູ້ຄົນໃຫ້ລອດພົ້ນຈາກຄວາມມືດ. ເມື່ອເຈົ້າເຊື່ອຈົນເຖິງຈຸດໃດໜຶ່ງ ແລະ ສາມາດປົດປ່ອຍຕົນເອງຈາກຄວາມເສື່ອມຊາມຂອງເນື້ອໜັງ ແລະ ບໍ່ຖືກຄວາມເສື່ອມຊາມນີ້ມັດດ້ວຍໂສ້ອີກຕໍ່ໄປ, ເຈົ້າຈະບໍ່ຖືກຊ່ວຍໃຫ້ລອດພົ້ນບໍ? ເມື່ອເຈົ້າດໍາລົງຊີວິດຢູ່ພາຍໃຕ້ອໍານາດຂອງຊາຕານ, ເຈົ້າກໍບໍ່ສາມາດສະແດງອອກເຖິງພຣະເຈົ້າໄດ້, ເຈົ້າເປັນສິ່ງທີ່ສົກກະປົກ ແລະ ບໍ່ສາມາດຮັບເອົາມໍລະດົກຂອງພຣະເຈົ້າໄດ້. ຫຼັງຈາກທີ່ເຈົ້າຖືກຊໍາລະລ້າງ ແລະ ຖືກເຮັດໃຫ້ສົມບູນ, ເຈົ້າຈະບໍລິສຸດ, ເຈົ້າຈະເປັນຄົນປົກກະຕິ ແລະ ເຈົ້າຈະຖືກອວຍພອນໂດຍພຣະເຈົ້າ ແລະ ມີຄວາມເບີກບານໃຈຕໍ່ພຣະເຈົ້າ. ພາລະກິດທີ່ພຣະເຈົ້າປະຕິບັດໃນປັດຈຸບັນແມ່ນຄວາມລອດພົ້ນ ແລະ ຍິ່ງໄປກວ່ານັ້ນ ມັນຄືການພິພາກສາ, ການຂ້ຽນຕີ ແລະ ການສາບແຊ່ງ. ມັນມີຫຼາຍລັກສະນະ. ພວກເຈົ້າທຸກຄົນຈະເຫັນວ່າ ພຣະຄໍາຂອງພຣະເຈົ້າມີການ

ພິພາກສາ ແລະ ການຂ້ຽນຕີ, ພ້ອມທັງການສາບແຊ່ງອີກດ້ວຍ. ເຮົາເວົ້າເພື່ອບັນລຸຜົນ, ເພື່ອເຮັດໃຫ້ຜູ້ຄົນຮູ້ຈັກຕົນເອງ ແລະ ບໍ່ແມ່ນເພື່ອໃຫ້ຜູ້ຄົນຕາຍ. ຫົວໃຈຂອງເຮົາແມ່ນເພື່ອເຫັນແກ່ພວກເຈົ້າ. ການກ່າວແມ່ນໜຶ່ງໃນວິທີທີ່ເຮົາປະຕິບັດພາລະກິດ; ຜ່ານທາງພຣະທຳ ເຮົາໄດ້ສະແດງເຖິງອຸປະນິໄສຂອງພຣະເຈົ້າ ແລະ ເຮັດໃຫ້ເຈົ້າເຂົ້າໃຈຄວາມປະສົງຂອງພຣະເຈົ້າ. ເນື້ອໜັງຂອງເຈົ້າອາດຕາຍ, ແຕ່ເຈົ້າຈະມີຈິດໃຈ ແລະ ຈິດວິນຍານ. ຖ້າຜູ້ຄົນມີພຽງແຕ່ເນື້ອໜັງ, ກໍຈະບໍ່ມີຄວາມໝາຍໃນຄວາມເຊື່ອຂອງພວກເຂົາ ຫຼື ບໍ່ມີຄວາມໝາຍໃນພາລະກິດເຫຼົ່ານີ້ທີ່ເຮົາໄດ້ປະຕິບັດ. ໃນປັດຈຸບັນ, ເຮົາໄດ້ເວົ້າດ້ວຍໜຶ່ງວິທີ ແລະ ຫຼັງຈາກນັ້ນກໍດ້ວຍອີກໜຶ່ງວິທີ; ໃນເວລາໜຶ່ງ ເຮົາກໍກຽດຊັງຜູ້ຄົນຫຼາຍທີ່ສຸດ ແລະ ແລ້ວບາງຄັ້ງ ເຮົາກໍຮັກຫຼາຍທີ່ສຸດ; ເຮົາເຮັດສິ່ງນີ້ເພື່ອບັນລຸການປ່ຽນແປງໃນອຸປະນິໄສຂອງເຈົ້າ, ພ້ອມທັງປ່ຽນແປງແນວຄິດຂອງເຈົ້າກ່ຽວກັບພາລະກິດຂອງພຣະເຈົ້າ.

ຍຸກສຸດທ້າຍໄດ້ມາເຖິງແລ້ວ ແລະ ບັນດາປະຊາຊາດທົ່ວໂລກກຳລັງຢູ່ໃນຄວາມວຸ້ນວາຍ. ມີຄວາມສັບສົນບໍ່ເປັນລະບຽບທາງການເມືອງ, ມີຄວາມອຶດຢາກ, ໂລກລະບາດຮ້າຍແຮງ, ນໍ້າຖ້ວມ ແລະ ໄພແຫ້ງແລ້ງປະກົດຂຶ້ນທຸກຫົນແຫ່ງ. ມີໄພພິບັດໃນໂລກມະນຸດ; ສະຫວັນໄດ້ສົ່ງໄພຮ້າຍແຮງລົງມາເຊັ່ນກັນ. ສິ່ງເຫຼົ່ານີ້ແມ່ນສັນຍານຂອງຍຸກສຸດທ້າຍ. ແຕ່ສຳລັບຜູ້ຄົນແລ້ວ, ມັນເບິ່ງຄືກັບວ່າໂລກແຫ່ງຄວາມເບີກບານ ແລະ ຄວາມສະຫງ່າງາມ: ມັນເປັນໂລກທີ່ກຳລັງຢູ່ໃນສະພາບດັ່ງກ່າວນັ້ນຫຼາຍຍິ່ງຂຶ້ນ, ຫົວໃຈຂອງຜູ້ຄົນລ້ວນແລ້ວແຕ່ຖືກດຶງມາຫາສິ່ງນັ້ນ ແລະ ຫຼາຍຄົນກໍຕິດກັບດັກ ແລະ ບໍ່ສາມາດປົດປ່ອຍຕົນເອງອອກຈາກສິ່ງນັ້ນ; ຄົນຈຳນວນຫຼວງຫຼາຍຈະຖືກຫຼອກລວງໂດຍຄົນທີ່ປະຕິບັດໃນການລໍ້ລວງ ແລະ ເວດມົນຄາຖາ. ຖ້າເຈົ້າບໍ່ພະຍາຍາມເພື່ອຄວາມກ້າວໜ້າ, ບໍ່ມີອຸດົມການ ແລະ ບໍ່ໄດ້ຢັ່ງຮາກຕົນເອງໃນຫົນທາງທີ່ແທ້ຈິງ, ເຈົ້າກໍຈະຖືກກວາດລ້າງດ້ວຍຄື້ນກະແສຂອງຄວາມບາບ. ຈີນເປັນປະເທດທີ່ຫຼ້າຫຼັງທີ່ສຸດໃນບັນດາປະເທດຕ່າງໆ; ມັນຄືດິນແດນທີ່ມັງກອນແດງໃຫຍ່ນອນຂົດຢູ່, ມັນມີຄົນສ່ວນໃຫຍ່ນະມັດສະການພະທຽມ ແລະ ມີສ່ວນຮ່ວມໃນເວດມົນຄາຖາ, ວັດສ່ວນໃຫຍ່ເປັນສະຖານທີ່ຂອງພວກຜີຮ້າຍທີ່ສົກກະປົກອາໄສຢູ່. ເຈົ້າເກີດຈາກສິ່ງນັ້ນ, ເຈົ້າຖືກສັ່ງສອນໂດຍສິ່ງນັ້ນ ແລະ ແຊ່ຢູ່ໃນອິດທິພົນຂອງມັນ; ເຈົ້າຖືກມັນເຮັດໃຫ້ເສື່ອມຊາມ ແລະ ທໍລະມານ, ແຕ່ຫຼັງຈາກທີ່ຖືກປຸກໃຫ້ຕື່ນຂຶ້ນ ເຈົ້າກໍປະຖິ້ມມັນ ແລະ ຖືກພຣະເຈົ້າຮັບເອົາຢ່າງສົມບູນ. ນີ້ແມ່ນສະຫງ່າລາສີຂອງພຣະເຈົ້າ ແລະ ນີ້ຄືເຫດຜົນທີ່ວ່າເປັນຫຍັງຂັ້ນຕອນນີ້ຂອງພາລະກິດຈຶ່ງມີຄວາມສຳຄັນຢ່າງຍິ່ງ. ພຣະເຈົ້າໄດ້ປະຕິບັດພາລະກິດໃນລະດັບທີ່ຍິ່ງໃຫຍ່, ໄດ້ກ່າວພຣະທຳຫຼາຍຂໍ້ ແລະ ໃນທີ່ສຸດ ພຣະອົງກໍຈະຮັບເອົາພວກເຈົ້າຢ່າງສົມບູນ, ນີ້ແມ່ນສ່ວນໜຶ່ງຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ ແລະ ພວກເຈົ້າກໍເປັນ "ຂອງທີ່ໄດ້ມາຈາກການຊະນະເສິກ" ຂອງການສູ້ຮົບຂອງພຣະເຈົ້າກັບຊາຕານ. ຍິ່ງພວກເຈົ້າເຂົ້າໃຈຄວາມຈິງຫຼາຍສໍ່າໃດ ແລະ ຍິ່ງຊີວິດໃນຄຣິສຕະຈັກຂອງພວກເຈົ້າດີຂຶ້ນຫຼາຍສໍ່າໃດ, ມັງກອນແດງໃຫຍ່ກໍຍິ່ງຈະຖືກເຮັດໃຫ້ຄຸເຂົ່າລົງຫຼາຍສໍ່ານັ້ນ. ສິ່ງເຫຼົ່ານີ້ແມ່ນບັນຫາທັງໝົດຂອງໂລກຝ່າຍວິນຍານ, ສິ່ງເຫຼົ່ານີ້ເປັນການສູ້ຮົບຂອງໂລກຝ່າຍວິນຍານ ແລະ ເມື່ອພຣະເຈົ້າມີໄຊຊະນະ, ຊາຕານກໍຈະຖືກເຮັດໃຫ້ອັບອາຍ ແລະ ລົ້ມລົງ. ຂັ້ນຕອນນີ້ຂອງ

ພາລະກິດຂອງພຣະເຈົ້າມີຄວາມສຳຄັນຢ່າງໃຫຍ່ຫຼວງ. ພຣະເຈົ້າປະຕິບັດພາລະກິດໃນລະດັບທີ່ຍິ່ງໃຫຍ່ດັ່ງກ່າວ ແລະ ຊ່ວຍຄົນກຸ່ມນີ້ໃຫ້ລອດພົ້ນທັງໝົດ ເພື່ອວ່າພວກເຈົ້າຈະສາມາດຫຼົບໜີຈາກອິດທິພົນຂອງຊາຕານ, ດຳລົງຊີວິດຢູ່ໃນດິນແດນທີ່ສັກສິດ, ດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະເຈົ້າ ແລະ ມີການນຳພາ ແລະ ການຊີ້ນຳຂອງແສງສະຫວ່າງ. ແລ້ວມັນຈຶ່ງມີຄວາມໝາຍໃນຊີວິດຂອງເຈົ້າ. ສິ່ງທີ່ພວກເຈົ້າກິນ ແລະ ນຸ່ງແມ່ນແຕກຕ່າງຈາກຜູ້ທີ່ບໍ່ເຊື່ອ; ພວກເຈົ້າໄດ້ຮັບພຣະທຳຂອງພຣະເຈົ້າ ແລະ ດຳລົງຊີວິດທີ່ມີຄວາມໝາຍ ແລະ ພວກເຂົາໄດ້ຮັບຫຍັງ? ພວກເຂົາພຽງແຕ່ໄດ້ຮັບ “ມໍລະດົກຂອງບັນພະບຸລຸດ” ຂອງພວກເຂົາ ແລະ “ວິນຍານແຫ່ງຊາດ” ຂອງພວກເຂົາ. ພວກເຂົາບໍ່ມີຮ່ອງຮອຍຂອງຄວາມເປັນມະນຸດແມ່ນແຕ່ໜ້ອຍດຽວ! ເຄື່ອງນຸ່ງ, ຄຳເວົ້າ ແລະ ການກະທຳຂອງພວກເຈົ້າແຕກຕ່າງຈາກພວກເຂົາທັງນັ້ນ. ໃນທີ່ສຸດແລ້ວ ພວກເຈົ້າຈະຫຼົບໜີຈາກຄວາມສົກກະປົກຢ່າງຄົບຖ້ວນ, ບໍ່ໄດ້ຕິດກັບດັກຢູ່ໃນການລໍ້ລວງຂອງຊາຕານອີກຕໍ່ໄປ ແລະ ໄດ້ຮັບເອົາການຈັດກຽມປະຈຳວັນຂອງພຣະເຈົ້າ. ພວກເຈົ້າຄວນລະມັດລະວັງຢູ່ສະເໝີ. ເຖິງແມ່ນພວກເຈົ້າດຳລົງຊີວິດໃນສະຖານທີ່ສົກກະປົກ, ພວກເຈົ້າກໍບໍ່ໄດ້ມີມົນທິນຈາກຄວາມສົກກະປົກ ແລະ ສາມາດດຳລົງຊີວິດຢູ່ຂ້າງໆພຣະເຈົ້າ, ຮັບການປົກປ້ອງທີ່ຍິ່ງໃຫຍ່ຂອງພຣະອົງ. ພຣະເຈົ້າໄດ້ເລືອກພວກເຈົ້າຈາກຄົນທັງໝົດໃນດິນແດນສີເຫຼືອງນີ້. ພວກເຈົ້າບໍ່ແມ່ນຄົນທີ່ໄດ້ຮັບພອນຫຼາຍທີ່ສຸດບໍ? ເຈົ້າເປັນສິ່ງທີ່ຖືກສ້າງ, ແນ່ນອນ ເຈົ້າຄວນນະມັດສະການພຣະເຈົ້າ ແລະ ສະແຫວງຫາຄວາມໝາຍຂອງຊີວິດ. ຖ້າເຈົ້າບໍ່ນະມັດສະການພຣະເຈົ້າແຕ່ດຳລົງຊີວິດຢູ່ພາຍໃນເນື້ອໜັງທີ່ສົກກະປົກຂອງເຈົ້າ, ແລ້ວເຈົ້າບໍ່ແມ່ນສັດຮ້າຍໃນເຄື່ອງແຕ່ງກາຍຂອງມະນຸດບໍ? ຍ້ອນເຈົ້າເປັນມະນຸດ, ເຈົ້າຄວນເສຍສະຫຼະຕົນເອງເພື່ອພຣະເຈົ້າ ແລະ ອົດທົນກັບການທົນທຸກໆປະການ! ເຈົ້າຄວນຍອມຮັບເອົາການທົນທຸກເລັກນ້ອຍທີ່ເຈົ້າໄດ້ຮັບໃນປັດຈຸບັນຢ່າງເຕັມໃຈ ແລະ ໝັ້ນໃຈ ແລະ ດຳລົງຊີວິດທີ່ມີຄວາມໝາຍຄືກັນກັບໂຢບ ແລະ ເປໂຕ. ໃນໂລກນີ້, ມະນຸດສວມໃສ່ເຄື່ອງນຸ່ງຂອງຜີຮ້າຍ, ກິນອາຫານຈາກຜີຮ້າຍ ແລະ ເຮັດວຽກ ແລະ ຮັບໃຊ້ພາຍໃຕ້ນິ້ວໂປ້ຂອງຜີຮ້າຍ, ຖືກຢຽບຢໍ່າໃນຄວາມສົກກະປົກຂອງມັນຢ່າງສິ້ນເຊີງ. ຖ້າເຈົ້າບໍ່ເຂົ້າໃຈຄວາມໝາຍຂອງຊີວິດ ຫຼື ຮັບເອົາທົນທາງທີ່ແທ້ຈິງ, ແລ້ວແມ່ນຫຍັງຄືຄວາມໝາຍໃນການດຳລົງຊີວິດແບບນີ້? ພວກເຈົ້າເປັນຄົນທີ່ສະແຫວງຫາເສັ້ນທາງທີ່ຖືກຕ້ອງ, ຄົນທີ່ສະແຫວງຫາການປັບປຸງ. ພວກເຈົ້າເປັນຄົນທີ່ລຸກຂຶ້ນໃນປະເທດຊາດຂອງມັງກອນແດງໃຫຍ່, ຄົນທີ່ພຣະເຈົ້າເອີ້ນວ່າຊອບທຳ. ນັ້ນບໍ່ແມ່ນຊີວິດທີ່ມີຄວາມໝາຍທີ່ສຸດບໍ?

# ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (1)

ໃນຍຸກແຫ່ງພຣະຄຸນ, ໂຢຮັນປູທາງສຳລັບພຣະເຢຊູ. ເພິ່ນບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າເອງ ແລະ ພຽງແຕ່ປະຕິບັດໜ້າທີ່ຂອງມະນຸດ. ເຖິງແມ່ນໂຢຮັນເປັນຜູ້ບຸກເບີກທາງໃຫ້ກັບພຣະຜູ້ເປັນເຈົ້າ, ເພິ່ນກໍບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້; ເພິ່ນພຽງແຕ່ເປັນມະນຸດທີ່ຖືກພຣະວິນຍານບໍລິສຸດໃຊ້ເທົ່ານັ້ນ. ຫຼັງຈາກທີ່ພຣະເຢຊູໄດ້ຮັບບັບຕິດສະມາ, ພຣະວິນຍານບໍລິສຸດກໍລົງມາຢູ່ເທິງພຣະອົງດັ່ງນົກເຂົາ. ຫຼັງຈາກນັ້ນ ພຣະອົງກໍເລີ່ມຕົ້ນພາລະກິດຂອງພຣະອົງ ນັ້ນກໍຄືພຣະອົງເລີ່ມປະຕິບັດພັນທະກິດຂອງພຣະຄຣິດ. ເຫດຜົນທີ່ວ່າເປັນຫຍັງພຣະອົງຈຶ່ງມີຕົວຕົນຂອງພຣະເຈົ້າ ນັ້ນກໍຍ້ອນວ່າ ພຣະອົງມາຈາກພຣະເຈົ້າ. ບໍ່ວ່າຄວາມເຊື່ອຂອງພຣະອົງກ່ອນໜ້ານີ້ຈະເປັນແນວໃດກໍຕາມ, ມັນອາດຈະອ່ອນແອໃນຫຼາຍຄັ້ງ ຫຼື ເຂັ້ມແຂງໃນບາງຄັ້ງ, ທຸກສິ່ງແມ່ນເປັນຍ້ອນຊີວິດມະນຸດທຳມະດາທີ່ພຣະອົງດຳລົງຢູ່ກ່ອນປະຕິບັດພັນທະກິດຂອງພຣະອົງ. ຫຼັງຈາກທີ່ພຣະອົງໄດ້ຮັບບັບຕິດສະມາ (ນັ້ນກໍຄື ຖືກເຈີມ) ລິດອຳນາດ ແລະ ສະຫງ່າລາສີຂອງພຣະເຈົ້າຈຶ່ງຢູ່ກັບພຣະອົງທັນທີ ແລະ ແລ້ວພຣະອົງກໍເລີ່ມປະຕິບັດພັນທະກິດຂອງພຣະອົງ. ພຣະອົງສາມາດເຮັດໝາຍສຳຄັນ ແລະ ສິ່ງອັດສະຈັນ, ປະຕິບັດການອັດສະຈັນ ແລະ ພຣະອົງມີລິດອຳນາດ ແລະ ສິດອຳນາດ, ນັ້ນກໍຍ້ອນພຣະອົງປະຕິບັດພາລະກິດແທນພຣະເຈົ້າໂດຍກົງ; ພຣະອົງປະຕິບັດພາລະກິດຂອງພຣະວິນຍານແທນພຣະອົງ ແລະ ສຳແດງເຖິງສຽງຂອງພຣະວິນຍານ. ສະນັ້ນ ພຣະອົງຈຶ່ງເປັນພຣະເຈົ້າເອງ; ສິ່ງນີ້ແມ່ນບໍ່ສາມາດໂຕ້ຖຽງໄດ້. ໂຢຮັນແມ່ນຖືກພຣະວິນຍານບໍລິສຸດໃຊ້. ເພິ່ນບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ ຫຼື ເປັນໄປບໍ່ໄດ້ທີ່ເພິ່ນຈະເປັນຕົວແທນໃຫ້ກັບພຣະເຈົ້າ. ຖ້າເພິ່ນປາຖະໜາທີ່ຈະເຮັດແບບນັ້ນ, ພຣະວິນຍານບໍລິສຸດກໍຈະບໍ່ອະນຸຍາດໃຫ້ເພິ່ນເຮັດໄດ້, ນັ້ນກໍຍ້ອນວ່າ ເພິ່ນຈະບໍ່ສາມາດປະຕິບັດພາລະກິດທີ່ພຣະເຈົ້າຕັ້ງໃຈເຮັດໃຫ້ສຳເລັດ. ບາງເທື່ອມີຫຼາຍສິ່ງໃນຕົວເພິ່ນທີ່ມາຈາກຄວາມປະສົງຂອງມະນຸດ ຫຼື ສິ່ງທີ່ອອກນອກຮູ້ນອກທາງ; ບໍ່ວ່າຈະໃນກໍລະນີໃດກໍຕາມ ເພິ່ນບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ໂດຍກົງ. ຄວາມຜິດພາດ ແລະ ຄວາມໄຮ້ເຫດຜົນຂອງເພິ່ນພຽງແຕ່ເປັນຕົວແທນໃຫ້ກັບເພິ່ນເອງ, ແຕ່ພາລະກິດຂອງເພິ່ນເປັນຕົວແທນຂອງພຣະວິນຍານບໍລິສຸດ. ເຖິງຢ່າງໃດກໍຕາມ ເຈົ້າບໍ່ສາມາດເວົ້າວ່າທັງໝົດຂອງເພິ່ນເປັນຕົວແທນໃຫ້ກັບພຣະເຈົ້າ. ການນອກຮູ້ນອກທາງ ແລະ ຄວາມຜິດພາດຂອງເພິ່ນສາມາດເປັນຕົວແທນໃຫ້ກັບພຣະເຈົ້າເຊັ່ນກັນບໍ? ຄວາມຜິດພາດໃນການເປັນຕົວແທນໃຫ້ກັບມະນຸດແມ່ນເປັນສິ່ງປົກກະຕິ, ແຕ່ຖ້າຄົນໜຶ່ງອອກນອກຮູ້ນອກທາງໃນການເປັນຕົວແທນໃຫ້ກັບພຣະເຈົ້າ, ແລ້ວນັ້ນຈະບໍ່ແມ່ນການບໍ່ເຄົາລົບຕໍ່ພຣະເຈົ້າບໍ? ນັ້ນຈະບໍ່ແມ່ນການໝິ່ນປະໝາດຕໍ່ພຣະວິນຍານບໍລິສຸດບໍ? ພຣະວິນຍານບໍລິສຸດບໍ່ອະນຸຍາດໃຫ້ມະນຸດຢືນຢູ່ໃນຕຳແໜ່ງຂອງພຣະເຈົ້າຢ່າງງ່າຍດາຍ ເຖິງແມ່ນເຂົາຈະໄດ້ຮັບການຍົກຍ້ອງສັນລະເສີນຈາກຄົນອື່ນ. ຖ້າເຂົາບໍ່ແມ່ນພຣະເຈົ້າ, ເຂົາກໍຈະບໍ່ສາມາດຍຶດໝັ້ນໃນທີ່ສຸດ. ພຣະວິນຍານບໍລິສຸດບໍ່ອະນຸຍາດໃຫ້ມະນຸດເປັນຕົວແທນໃຫ້ກັບພຣະເຈົ້າຕາມອຳເພີໃຈຂອງມະນຸດ! ຕົວຢ່າງເຊັ່ນ: ມັນແມ່ນພຣະວິນຍານ

ບໍລິສຸດທີ່ເປັນພະຍານໃຫ້ກັບໂຢຮັນ ແລະ ພຣະວິນຍານບໍລິສຸດຍັງເປັນຜູ້ເປີດເຜີຍເພິ່ນໃຫ້ເປັນຜູ້ປູທາງໃຫ້ກັບພຣະເຢຊູ, ແຕ່ວ່າ ພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນເພິ່ນນັ້ນ ແມ່ນໄດ້ວັດແທກເປັນຢ່າງດີ. ສິ່ງທີ່ຮຽກຮ້ອງຈາກໂຢຮັນແມ່ນໃຫ້ເປັນຜູ້ປູທາງໃຫ້ແກ່ພຣະເຢຊູ ເພື່ອຈັດກຽມຫົນທາງໃຫ້ກັບພຣະອົງ. ນັ້ນໝາຍຄວາມວ່າ ພຣະວິນຍານບໍລິສຸດພຽງແຕ່ສິ່ງເສີມພາລະກິດຂອງເພິ່ນໃນການປູເສັ້ນທາງ ແລະ ອະນຸຍາດໃຫ້ເພິ່ນປະຕິບັດພາລະກິດດັ່ງກ່າວເທົ່ານັ້ນ, ເພິ່ນບໍ່ໄດ້ຮັບອະນຸຍາດໃຫ້ປະຕິບັດພາລະກິດອື່ນ. ໂຢຮັນເປັນຕົວແທນໃຫ້ກັບເອລີຢາ ແລະ ເພິ່ນເປັນຕົວແທນໃຫ້ກັບຜູ້ປະກາດພຣະທຳໃນການປູທາງໃຫ້ພຣະອົງເຈົ້າ. ພຣະວິນຍານບໍລິສຸດສົ່ງເສີມເພິ່ນໃນສິ່ງນີ້; ຕາບໃດທີ່ພາລະກິດຂອງເພິ່ນຄືການປູທາງ, ພຣະວິນຍານບໍລິສຸດກໍສົ່ງເສີມເພິ່ນ. ແຕ່ຖ້າຫາກເພິ່ນອ້າງຕົນເອງວ່າເປັນພຣະເຈົ້າ ແລະ ເວົ້າວ່າເພິ່ນໄດ້ມາເພື່ອເຮັດໃຫ້ພາລະກິດແຫ່ງການໄຖ່ບາບສຳເລັດລົງ, ພຣະວິນຍານບໍລິສຸດກໍຈະຕ້ອງລົງວິໄນເພິ່ນ. ບໍ່ວ່າພາລະກິດຂອງໂຢຮັນຈະຍິ່ງໃຫຍ່ສໍ່າໃດກໍຕາມ ແລະ ເຖິງແມ່ນວ່າພຣະວິນຍານບໍລິສຸດຈະສົ່ງເສີມພາລະກິດນັ້ນກໍຕາມ, ພາລະກິດຂອງເພິ່ນແມ່ນມີຂອບເຂດ. ເຖິງແມ່ນວ່າ ພຣະວິນຍານບໍລິສຸດຈະສົ່ງເສີມພາລະກິດຂອງເພິ່ນແທ້, ແຕ່ສິດອຳນາດທີ່ມອບໃຫ້ກັບເພິ່ນໃນເວລານັ້ນແມ່ນຖືກຈຳກັດພຽງແຕ່ຢູ່ໃນການຈັດກຽມເສັ້ນທາງ. ເພິ່ນບໍ່ສາມາດປະຕິບັດພາລະກິດອື່ນໄດ້, ຍ້ອນເພິ່ນເປັນພຽງໂຢຮັນທີ່ເປັນຜູ້ປູທາງເທົ່ານັ້ນ ແລະ ບໍ່ແມ່ນພຣະເຢຊູ. ສະນັ້ນ ຄຳພະຍານຂອງພຣະວິນຍານບໍລິສຸດແມ່ນກະແຈສຳຄັນ, ແຕ່ວ່າພາລະກິດທີ່ພຣະວິນຍານບໍລິສຸດອະນຸຍາດໃຫ້ມະນຸດປະຕິບັດແມ່ນຍິ່ງສຳຄັນຫຼາຍກວ່າ. ໂຢຮັນບໍ່ໄດ້ເປັນພະຍານຢ່າງແທ້ຈິງບໍໃນເວລານັ້ນ? ພາລະກິດຂອງເພິ່ນບໍ່ໄດ້ຍິ່ງໃຫຍ່ເຊັ່ນກັນບໍ? ແຕ່ເຖິງຢ່າງໃດກໍຕາມ ພາລະກິດທີ່ເພິ່ນປະຕິບັດບໍ່ສາມາດລື່ນພາລະກິດຂອງພຣະເຢຊູໄດ້, ຍ້ອນວ່າ ເພິ່ນເປັນພຽງມະນຸດທີ່ຖືກພຣະວິນຍານບໍລິສຸດໃຊ້ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າໂດຍກົງໄດ້ ແລະ ດ້ວຍເຫດນັ້ນ ພາລະກິດທີ່ເພິ່ນປະຕິບັດຈຶ່ງມີຂໍ້ຈຳກັດ. ຫຼັງຈາກທີ່ເພິ່ນໄດ້ສຳເລັດພາລະກິດແຫ່ງການປູທາງ, ພຣະວິນຍານບໍລິສຸດກໍບໍ່ສົ່ງເສີມຄຳພະຍານຂອງເພິ່ນອີກຕໍ່ໄປ, ບໍ່ມີພາລະກິດໃໝ່ເກີດຂຶ້ນຕາມຫຼັງເພິ່ນ ແລະ ເມື່ອພາລະກິດຂອງພຣະເຈົ້າເອງໄດ້ເລີ່ມຕົ້ນຂຶ້ນ, ໂຢຮັນກໍຈາກໄປ.

ມີບາງຄົນທີ່ຖືກຄອບງຳໂດຍວິນຍານຊົ່ວຮ້າຍ ແລະ ຮ້ອງໂວຍວາຍຂຶ້ນຢ່າງແຮງວ່າ "ເຮົາເປັນພຣະເຈົ້າ!" ແຕ່ໃນທີ່ສຸດ ພວກເຂົາກໍຖືກເປີດໂປງ ຍ້ອນພວກເຂົາຜິດໃນສິ່ງທີ່ພວກເຂົາເປັນຕົວແທນໃຫ້. ພວກເຂົາເປັນຕົວແທນໃຫ້ກັບຊາຕານ ແລະ ພຣະວິນຍານບໍລິສຸດກໍບໍ່ສົນໃຈພວກເຂົາ. ບໍ່ວ່າເຈົ້າຈະຍົກຍ້ອງຕົນເອງຫຼາຍສໍ່າໃດກໍຕາມ ຫຼື ເຈົ້າຈະຮ້ອງຂຶ້ນດັງສໍ່າໃດກໍຕາມ, ເຈົ້າກໍຍັງເປັນສິ່ງທີ່ຖືກສ້າງ ແລະ ເປັນຄົນຂອງຊາຕານ. ເຮົາບໍ່ເຄີຍຮ້ອງຂຶ້ນວ່າ "ເຮົາເປັນພຣະເຈົ້າ, ເຮົາເປັນພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ!" ແຕ່ພາລະກິດທີ່ເຮົາປະຕິບັດແມ່ນພາລະກິດຂອງພຣະເຈົ້າ. ເຮົາຈຳເປັນຕ້ອງຮ້ອງຂຶ້ນບໍ? ບໍ່ຈຳເປັນຕ້ອງຍ້ອງຍໍສັນລະເສີນ. ພຣະເຈົ້າປະຕິບັດພາລະກິດຂອງພຣະອົງເອງ ແລະ ບໍ່ຕ້ອງການໃຫ້ມະນຸດມອບສະຖານະໃຫ້ກັບພຣະອົງ ຫຼື ມອບນາມມະຍົດອັນສູງສົ່ງໃຫ້ກັບພຣະອົງ: ພາລະກິດຂອງພຣະອົງແມ່ນພຽງພໍທີ່ຈະເປັນຕົວແທນໃຫ້ກັບພຣະອົງ ແລະ ສະຖານະຂອງພຣະອົງ.

ກ່ອນພຣະອົງຈະໄດ້ຮັບບັບຕິດສະມາ, ພຣະເຢຊູບໍ່ແມ່ນພຣະເຈົ້າເອງບໍ? ພຣະອົງບໍ່ແມ່ນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າບໍ? ແນ່ນອນ ມັນບໍ່ສາມາດເວົ້າໄດ້ວ່າ ພຽງແຕ່ຫຼັງຈາກທີ່ໄດ້ຮັບຄຳພະຍານ ພຣະອົງຈຶ່ງກາຍເປັນພຣະບຸດອົງດຽວຂອງພຣະເຈົ້າ? ກ່ອນທີ່ພຣະອົງຈະເລີ່ມຕົ້ນພາລະກິດຂອງພຣະອົງ, ໄດ້ມີມະນຸດທີ່ຊື່ວ່າພຣະເຢຊູຢູ່ແລ້ວບໍ? ເຈົ້າບໍ່ສາມາດເລີ່ມຕົ້ນເສັ້ນທາງໃໝ່ ຫຼື ເປັນຕົວແທນໃຫ້ກັບພຣະວິນຍານບໍລິສຸດໄດ້. ເຈົ້າບໍ່ສາມາດສະແດງເຖິງພາລະກິດຂອງພຣະວິນຍານ ຫຼື ພຣະທຳທີ່ພຣະອົງໄດ້ກ່າວ. ເຈົ້າບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າເອງ ແລະ ເຈົ້າກໍບໍ່ສາມາດປະຕິບັດພາລະກິດຂອງພຣະວິນຍານ. ສະຕິປັນຍາ, ການອັດສະຈັນ ແລະ ຄວາມບໍ່ສາມາດຢັ່ງເຖິງໄດ້ຂອງພຣະເຈົ້າ ແລະ ອຸປະນິໄສທັງໝົດທີ່ພຣະເຈົ້າຂ້ຽນຕີມະນຸດ: ທຸກສິ່ງເຫຼົ່ານີ້ແມ່ນຢູ່ເໜືອຄວາມສາມາດໃນການສະແດງອອກຂອງເຈົ້າ. ສະນັ້ນ ມັນຈະບໍ່ເປັນປະໂຫຍດຫຍັງເລີຍທີ່ຈະພະຍາຍາມອ້າງວ່າເປັນພຣະເຈົ້າ; ເຈົ້າຈະມີພຽງແຕ່ຊື່ສຽງ ແລະ ບໍ່ມີທາດແທ້. ພຣະເຈົ້າເອງໄດ້ສະເດັດມາ, ແຕ່ບໍ່ມີໃຜຮູ້ຈັກພຣະເຈົ້າ, ເຖິງຢ່າງນັ້ນກໍຕາມ ພຣະອົງກໍຍັງສືບຕໍ່ໃນພາລະກິດຂອງພຣະອົງ ແລະ ປະຕິບັດເພື່ອເປັນຕົວແທນໃຫ້ກັບພຣະວິນຍານ. ບໍ່ວ່າເຈົ້າຈະເອີ້ນພຣະອົງວ່າມະນຸດ ຫຼື ພຣະເຈົ້າ, ພຣະຜູ້ເປັນເຈົ້າ ຫຼື ພຣະຄຣິດ ຫຼື ເອີ້ນພຣະອົງວ່າເອື້ອຍ, ມັນກໍບໍ່ສຳຄັນ. ແຕ່ພາລະກິດທີ່ພຣະເຈົ້າປະຕິບັດແມ່ນພາລະກິດຂອງພຣະວິນຍານ ແລະ ເປັນຕົວແທນໃຫ້ກັບພາລະກິດຂອງພຣະເຈົ້າເອງ. ພຣະອົງບໍ່ສົນໃຈໃນຊື່ທີ່ມະນຸດເອີ້ນພຣະອົງ. ຊື່ນັ້ນສາມາດກຳນົດພາລະກິດຂອງພຣະອົງໄດ້ບໍ? ບໍ່ວ່າເຈົ້າຈະເອີ້ນພຣະອົງຢ່າງໃດກໍຕາມ ເມື່ອເວົ້າເຖິງພຣະເຈົ້າ ພຣະອົງແມ່ນເນື້ອໜັງທີ່ເປັນມະນຸດຂອງພຣະວິນຍານຂອງພຣະເຈົ້າ; ພຣະອົງເປັນຕົວແທນໃຫ້ກັບພຣະວິນຍານ ແລະ ໄດ້ຮັບການຮອງຮັບໂດຍພຣະວິນຍານ. ຖ້າເຈົ້າບໍ່ສາມາດຫຼີກທາງໃຫ້ກັບຍຸກໃໝ່ ຫຼື ນຳຍຸກເກົ່າໄປສູ່ຈຸດຈົບ ຫຼື ເລີ່ມຕົ້ນຍຸກໃໝ່ ຫຼື ປະຕິບັດພາລະກິດໃໝ່, ແລ້ວເຈົ້າກໍບໍ່ສາມາດຖືກເອີ້ນວ່າ ເປັນພຣະເຈົ້າໄດ້!

ແມ່ນແຕ່ມະນຸດທີ່ຖືກພຣະວິນຍານບໍລິສຸດໃຊ້ກໍບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າເອງໄດ້. ນີ້ໝາຍຄວາມວ່າ ມະນຸດດັ່ງກ່າວບໍ່ພຽງບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າ, ແຕ່ພາລະກິດທີ່ພວກເຂົາປະຕິບັດກໍຍັງບໍ່ສາມາດເປັນຕົວແທນໂດຍກົງໃຫ້ກັບພຣະເຈົ້າໄດ້. ເວົ້າອີກຢ່າງໜຶ່ງກໍຄື ປະສົບການຂອງມະນຸດບໍ່ສາມາດຈັດເຂົ້າຢູ່ໃນການຄຸ້ມຄອງຂອງພຣະເຈົ້າໂດຍກົງ ແລະ ມັນບໍ່ສາມາດເປັນຕົວແທນໃຫ້ກັບການຄຸ້ມຄອງຂອງພຣະເຈົ້າໄດ້. ພາລະກິດທີ່ພຣະເຈົ້າເອງປະຕິບັດກໍເປັນພາລະກິດທີ່ພຣະອົງຕັ້ງໃຈປະຕິບັດໃນແຜນການຄຸ້ມຄອງຂອງພຣະອົງເອງ ແລະ ກ່ຽວພັນກັບການຄຸ້ມຄອງທີ່ຍິ່ງໃຫຍ່. ພາລະກິດທີ່ມະນຸດປະຕິບັດ ປະກອບດ້ວຍການສະໜອງປະສົບການສ່ວນຕົວຂອງພວກເຂົາເອງ. ມັນປະກອບດ້ວຍການຊອກຫາເສັ້ນທາງແຫ່ງປະສົບການໃໝ່ທີ່ຢູ່ເໜືອເສັ້ນທາງທີ່ຜູ້ຄົນກ່ອນໜ້ານັ້ນໄດ້ຍ່າງ ແລະ ປະກອບດ້ວຍການນຳພາອ້າຍເອື້ອຍນ້ອງຂອງພວກເຂົາໃນຂະນະທີ່ຢູ່ພາຍໃຕ້ການນຳພາຂອງພຣະວິນຍານບໍລິສຸດ. ສິ່ງທີ່ມະນຸດເຫຼົ່ານີ້ສະໜອງກໍຄືປະສົບການສ່ວນຕົວຂອງພວກເຂົາ ຫຼື ບົດຂຽນກ່ຽວກັບຝ່າຍວິນຍານຂອງມະນຸດທີ່ເຄັ່ງສາສະໜາ. ເຖິງແມ່ນມະນຸດເຫຼົ່ານີ້ຖືກພຣະວິນຍານບໍລິສຸດໃຊ້, ພາລະກິດທີ່ພວກເຂົາປະຕິບັດກໍບໍ່ກ່ຽວຂ້ອງກັບພາລະກິດອັນຍິ່ງໃຫຍ່ຂອງແຜນການ

ຄຸ້ມຄອງຫົກພັນປີ. ພວກເຂົາເປັນພຽງແຕ່ມະນຸດທີ່ຖືກພຣະວິນຍານບໍລິສຸດຍົກຂຶ້ນມາໃນຊ່ວງເວລາໃດໜຶ່ງເພື່ອນໍາພາຜູ້ຄົນໄປຕາມກະແສຂອງພຣະວິນຍານບໍລິສຸດ ຈົນວ່າ ໜ້າທີ່ໆພວກເຂົາສາມາດປະຕິບັດໄດ້ສິ້ນສຸດລົງ ຫຼື ຈົນວ່າ ຊີວິດຂອງພວກເຂົາຈະສິ້ນສຸດລົງ. ພາລະກິດທີ່ພວກເຂົາປະຕິບັດພຽງແຕ່ເພື່ອຈັດກຽມເສັ້ນທາງທີ່ເໝາະສົມສໍາລັບພຣະເຈົ້າ ຫຼື ສືບຕໍ່ໃນດ້ານໃດໜຶ່ງຂອງການຄຸ້ມຄອງຂອງພຣະເຈົ້າເທິງແຜ່ນດິນໂລກເທົ່ານັ້ນ. ໃນຕົວພວກເຂົາເອງ, ມະນຸດເຫຼົ່ານີ້ບໍ່ສາມາດປະຕິບັດພາລະກິດທີ່ຍິ່ງໃຫຍ່ກວ່າໃນການຄຸ້ມຄອງຂອງພຣະອົງ ຫຼື ພວກເຂົາຈະບໍ່ສາມາດສ້າງເສັ້ນທາງອອກໃໝ່ ແລ້ວແຮງໄກທີ່ພວກເຂົາຈະສາມາດນໍາພາລະກິດທັງໝົດຂອງພຣະເຈົ້າຈາກຍຸກຜ່ານມາໄປສູ່ຄວາມສໍາເລັດໄດ້. ສະນັ້ນ ພາລະກິດທີ່ພວກເຂົາປະຕິບັດແມ່ນເປັນຕົວແທນໃຫ້ກັບສິ່ງຖືກສ້າງທີ່ປະຕິບັດໜ້າທີ່ຂອງເຂົາເທົ່ານັ້ນ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າເອງໃນການປະຕິບັດພັນທະກິດຂອງພຣະອົງໄດ້. ນີ້ກໍເພາະວ່າ ພາລະກິດທີ່ພວກເຂົາປະຕິບັດບໍ່ຄືກັບພາລະກິດທີ່ພຣະເຈົ້າປະຕິບັດເອງ. ພາລະກິດໃນການລິເລີ່ມຍຸກໃໝ່ບໍ່ແມ່ນສິ່ງທີ່ມະນຸດສາມາດປະຕິບັດແທນພຣະເຈົ້າໄດ້. ບໍ່ມີໃຜສາມາດປະຕິບັດພາລະກິດນັ້ນໄດ້ ນອກຈາກພຣະເຈົ້າເອງ. ພາລະກິດທັງໝົດທີ່ມະນຸດປະຕິບັດແມ່ນເປັນພຽງການປະຕິບັດໜ້າທີ່ຂອງເຂົາໃນຖານະເປັນສິ່ງທີ່ຖືກສ້າງ ແລະ ຖືກປະຕິບັດກໍຍ້ອນໄດ້ຮັບດົນບັນດານ ຫຼື ຖືກສ່ອງແສງສະຫວ່າງໂດຍພຣະວິນຍານບໍລິສຸດ. ການນໍາພາທີ່ມະນຸດເຫຼົ່ານີ້ຈັດກຽມໃຫ້ແມ່ນປະກອບດ້ວຍການສະແດງໃຫ້ມະນຸດເຫັນເຖິງເສັ້ນທາງແຫ່ງການປະຕິບັດໃນຊີວິດປະຈໍາວັນ ແລະ ວິທີທີ່ເຂົາຄວນປະພຶດເພື່ອໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ. ພາລະກິດຂອງມະນຸດບໍ່ໄດ້ກ່ຽວຂ້ອງກັບການຄຸ້ມຄອງຂອງພຣະເຈົ້າ ຫຼື ບໍ່ໄດ້ເປັນຕົວແທນໃຫ້ກັບພາລະກິດຂອງພຣະວິນຍານ. ຕົວຢ່າງກໍຄື ພາລະກິດຂອງພະຍານລີ່ ແລະ ຜູ້ເຝົ້າເບິ່ງໝີ່ ແມ່ນເພື່ອນໍາທາງເທົ່ານັ້ນ. ບໍ່ວ່າຈະເປັນຫົນທາງໃໝ່ ຫຼື ເກົ່າ, ພາລະກິດແມ່ນຖືກສົມມຸດຕິຖານຂຶ້ນອີງຕາມຫຼັກການທີ່ຢູ່ພາຍໃນພຣະຄໍາພີ. ບໍ່ວ່າມັນຈະເປັນການຟື້ນຟູຄຣິສຕະຈັກທ້ອງຖິ່ນ ຫຼື ສ້າງຄຣິສຕະຈັກທ້ອງຖິ່ນ, ພາລະກິດຂອງພວກເຂົາແມ່ນກ່ຽວຂ້ອງກັບການສ້າງຕັ້ງຄຣິສຕະຈັກ. ພາລະກິດທີ່ພວກເຂົາປະຕິບັດແມ່ນສືບຕໍ່ພາລະກິດທີ່ພຣະເຢຊູ ແລະ ສາວົກຂອງພຣະອົງຍັງບໍ່ໄດ້ເຮັດໃຫ້ສໍາເລັດ ຫຼື ບໍ່ໄດ້ພັດທະນາເພີ່ມເຕີມໃນຍຸກແຫ່ງພຣະຄຸນ. ສິ່ງທີ່ພວກເຂົາປະຕິບັດໃນພາລະກິດຂອງພວກເຂົາແມ່ນການຟື້ນຟູສິ່ງທີ່ພຣະເຢຊູຮຽກຮ້ອງໃນພາລະກິດໃນເວລານັ້ນຂອງພຣະອົງ ເຊິ່ງພຣະອົງຮ້ອງຮຽກໃຫ້ຄົນລຸ້ນຕໍ່ໆໄປ ປົກຄຸມຫົວຂອງພວກເຂົາ, ຮັບບັບຕິດສະມາ, ຫັກເຂົ້າຈີ່ ຫຼື ດື່ມເຫຼົ້າແວງ. ມັນສາມາດເວົ້າໄດ້ວ່າ ພາລະກິດຂອງພວກເຂົາແມ່ນເພື່ອຮັກສາພຣະຄໍາພີ ແລະ ເພື່ອສະແຫວງຫາເສັ້ນທາງທີ່ຢູ່ພາຍໃນພຣະຄໍາພີ. ພວກເຂົາບໍ່ໄດ້ສ້າງຄວາມກ້າວໜ້າຫຍັງໃໝ່ເລີຍ. ສະນັ້ນ ຜູ້ຄົນຈຶ່ງສາມາດຄົ້ນພົບຫົນທາງໃໝ່ແຫ່ງພາລະກິດຂອງພວກເຂົາພຽງແຕ່ພາຍໃນພຣະຄໍາພີ ເທົ່ານັ້ນ ພ້ອມທັງເຫັນວ່າ ການປະຕິບັດອີງຕາມພຣະຄໍາພີແມ່ນດີກວ່າ ແລະ ເປັນຈິງກວ່າ. ໃນພາລະກິດຂອງພວກເຂົາ ມະນຸດບໍ່ສາມາດຄົ້ນພົບຄວາມປະສົງໃນປັດຈຸບັນຂອງພຣະເຈົ້າ ແລ້ວແຮງໄກທີ່ພວກເຂົາຈະຄົ້ນພົບພາລະກິດໃໝ່ຂອງພຣະເຈົ້າແຫ່ງຍຸກສຸດທ້າຍວາງແຜນປະຕິບັດ. ນີ້ກໍເພາະວ່າເສັ້ນທາງທີ່ພວກເຂົາຍ່າງຍັງເປັນເສັ້ນທາງ

ເກົ່າ; ບໍ່ມີການເລີ່ມໃໝ່ ແລະ ບໍ່ມີການກ້າວໜ້າ. ພວກເຂົາສືບຕໍ່ຍຶດຖືຄວາມຈິງແຫ່ງການຖືກຄຶງເທິງໄມ້ກາງແຂນຂອງພຣະເຢຊູ, ຮັກສາການປະຕິບັດທີ່ຮຽກຮ້ອງໃຫ້ຜູ້ຄົນກັບໃຈ ແລະ ສາລະພາບຄວາມຜິດບາບຂອງພວກເຂົາ, ຍຶດຕິດກັບຄຳເວົ້າທີ່ວ່າ ຜູ້ໃດທີ່ອົດທົນຈົນເຖິງທີ່ສຸດກໍຈະຖືກຊ່ວຍໃຫ້ລອດພົ້ນ ແລະ ຜູ້ຊາຍແມ່ນເປັນຫົວໜ້າຂອງແມ່ຍິງ ແລະ ແມ່ຍິງຕ້ອງເຊື່ອຟັງສາມີຂອງເຂົາ ແລະຍິ່ງຍຶດຕິດກັບແນວຄິດຕາມປະເພນີທີ່ວ່າ ເອື້ອຍນ້ອງບໍ່ສາມາດເທດສະໜາໄດ້, ພຽງແຕ່ສາມາດເຊື່ອຟັງເທົ່ານັ້ນ. ຖ້າການນຳພາໃນລັກສະນະດັ່ງກ່າວຖືກຮັກສາຕໍ່ໄປ, ພຣະວິນຍານບໍລິສຸດຈະບໍ່ສາມາດປະຕິບັດພາລະກິດໃໝ່ຈັກເທື່ອ, ບໍ່ສາມາດເຮັດໃຫ້ມະນຸດເປັນອິດສະຫຼະຈາກກົດລະບຽບ ຫຼື ນຳພາພວກເຂົາສູ່ອານາຈັກແຫ່ງອິດສະຫຼະ ແລະ ຄວາມສວຍງາມ. ສະນັ້ນ ຂັ້ນຕອນນີ້ຂອງພາລະກິດ ເຊິ່ງເປັນພາລະກິດໃນການປ່ຽນແປງຍຸກ ໄດ້ຮຽກຮ້ອງໃຫ້ພຣະເຈົ້າເອງປະຕິບັດພາລະກິດ ແລະ ກ່າວ; ບໍ່ດັ່ງນັ້ນ ບໍ່ມີມະນຸດຄົນໃດສາມາດປະຕິບັດແທນພຣະອົງໄດ້. ຈົນເຖິງປັດຈຸບັນນີ້ ພາລະກິດທັງໝົດຂອງພຣະວິນຍານບໍລິສຸດທີ່ຢູ່ນອກກະແສນີ້ໄດ້ມາເຖິງຈຸດທີ່ບໍ່ໝິ້ງຕິງ ແລະ ຄົນທີ່ຖືກພຣະວິນຍານບໍລິສຸດໃຊ້ກໍໄດ້ຫຼົງຈຸດຢືນຂອງພວກເຂົາ. ສະນັ້ນ ຍ້ອນພາລະກິດຂອງມະນຸດທີ່ພຣະວິນຍານບໍລິສຸດໃຊ້ບໍ່ຄືກັບພາລະກິດທີ່ພຣະເຈົ້າປະຕິບັດເອງ, ຕົວຕົນຂອງພວກເຂົາ ແລະ ສິ່ງທີ່ພວກເຂົາປະພຶດແທນກໍແຕກຕ່າງເຊັ່ນກັນ. ນີ້ກໍຍ້ອນວ່າ ພາລະກິດທີ່ພຣະວິນຍານບໍລິສຸດຕັ້ງໃຈປະຕິບັດແມ່ນແຕກຕ່າງກັນ ແລະ ດ້ວຍເຫດນີ້ ຄົນທີ່ປະຕິບັດພາລະກິດແບບດຽວກັນກໍມີຕົວຕົນ ແລະ ສະຖານະທີ່ແຕກຕ່າງກັນ. ມະນຸດທີ່ພຣະວິນຍານບໍລິສຸດໃຊ້ອາດປະຕິບັດພາລະກິດໃໝ່ບາງຢ່າງ ແລະ ອາດກຳຈັດພາລະກິດບາງຢ່າງທີ່ເຮັດສຳເລັດໃນຍຸກຜ່ານມາ, ແຕ່ສິ່ງທີ່ພວກເຂົາປະຕິບັດແມ່ນບໍ່ໄດ້ສະແດງເຖິງອຸປະນິໄສ ແລະຄວາມປະສົງຂອງພຣະເຈົ້າໃນຍຸກໃໝ່. ພວກເຂົາພຽງແຕ່ປະຕິບັດພາລະກິດເພື່ອລົ້ມເລີກພາລະກິດຂອງຍຸກຜ່ານມາເທົ່ານັ້ນ ແລະ ບໍ່ແມ່ນເພື່ອປະຕິບັດພາລະກິດໃໝ່ດ້ວຍຈຸດປະສົງໃນການເປັນຕົວແທນໃຫ້ກັບອຸປະນິໄສຂອງພຣະເຈົ້າໂດຍກົງ. ສະນັ້ນ ບໍ່ວ່າພວກເຂົາຈະລົ້ມເລີກການປະຕິບັດທີ່ຫຼ້າສະໄໝຫຼາຍສໍ່າໃດກໍຕາມ ຫຼື ພວກເຂົາແນະນຳການປະຕິບັດໃໝ່ຫຼາຍສໍ່າໃດກໍຕາມ, ພວກເຂົາກໍຍັງເປັນຕົວແທນໃຫ້ກັບມະນຸດ ແລະ ສິ່ງຖືກສ້າງ. ໃນຂະນະດຽວກັນ, ເມື່ອພຣະເຈົ້າເອງປະຕິບັດພາລະກິດ, ພຣະອົງບໍ່ໄດ້ປະກາດລົ້ມເລີກການປະຕິບັດຂອງຍຸກເກົ່າຢ່າງເປີດເຜີຍ ຫຼື ປະກາດການເລີ່ມຕົ້ນຂອງຍຸກໃໝ່ໂດຍກົງ. ພຣະອົງກົງໄປກົງມາ ແລະ ຊື່ສັດໃນພາລະກິດຂອງພຣະອົງ. ພຣະອົງກົງໄປກົງມາໃນການປະຕິບັດພາລະກິດທີ່ພຣະອົງເຈດຕະນາໄວ້; ນັ້ນກໍຄື ພຣະອົງສະແດງພາລະກິດທີ່ພຣະອົງໄດ້ເລີ່ມຕົ້ນຂຶ້ນໂດຍກົງ, ປະຕິບັດພາລະກິດຕາມທີ່ພຣະອົງເຈດຕະນາໄວ້ໃນເບື້ອງຕົ້ນໂດຍກົງ, ສະແດງເຖິງການເປັນຢູ່ ແລະ ອຸປະນິໄສຂອງພຣະອົງ. ໃນຄວາມຄິດຂອງມະນຸດ, ອຸປະນິໄສຂອງພຣະອົງ ແລະພ້ອມດ້ວຍພາລະກິດຂອງພຣະອົງແມ່ນແຕກຕ່າງຈາກສິ່ງທີ່ຢູ່ໃນຍຸກອະດີດ. ແຕ່ວ່າ ຈາກທັດສະນະຂອງພຣະເຈົ້າແລ້ວ ນີ້ແມ່ນການສືບຕໍ່ເນື່ອງ ແລະ ການພັດທະນາເພີ່ມເຕີມໃນພາລະກິດຂອງພຣະອົງເທົ່ານັ້ນ. ເມື່ອພຣະເຈົ້າເອງປະຕິບັດ, ພຣະອົງສະແດງພຣະທຳຂອງພຣະອົງ ແລະ ເລີ່ມຕົ້ນພາລະກິດໃໝ່ໂດຍກົງ. ໃນທາງກົງກັນຂ້າມ, ເມື່ອມະນຸດປະຕິບັດພາລະກິດ, ມັນແມ່ນຜ່ານການຕຶກຕອງ ແລະ

ການສຶກສາ ຫຼື ມັນເປັນການຂະຫຍາຍຄວາມຮູ້ ແລະ ການຈັດລະບົບຂອງການປະຕິບັດຕາມທຳນຽມທີ່ຖືກຄົ້ນພົບໃນພາລະກິດຂອງຄົນອື່ນ. ນັ້ນໝາຍຄວາມວ່າ ແກ່ນແທ້ຂອງພາລະກິດທີ່ມະນຸດປະຕິບັດແມ່ນເພື່ອຕິດຕາມລະບຽບທີ່ຖືກຈັດຕັ້ງຂຶ້ນແລ້ວ ແລະ ເພື່ອ "ຍ່າງໃນເສັ້ນທາງເກົ່າໂດຍໃຊ້ເກີບໃໝ່". ນີ້ໝາຍຄວາມວ່າ ແມ່ນແຕ່ເສັ້ນທາງທີ່ມະນຸດຜູ້ທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດຍ່າງກໍຍັງເປັນເສັ້ນທາງທີ່ຖືກສ້າງຂຶ້ນເທິງສິ່ງທີ່ພຣະເຈົ້າເປີດເຜີຍ. ສະນັ້ນ ເມື່ອທຸກສິ່ງຖືກກ່າວອອກ ແລະ ເຮັດໃຫ້ສຳເລັດ, ມະນຸດກໍຍັງເປັນມະນຸດ ແລະ ພຣະເຈົ້າກໍຍັງເປັນພຣະເຈົ້າ.

ໂຢຮັນເກີດດ້ວຍຄຳສັນຍາ ເຊັ່ນດຽວກັນກັບອິຊາກທີ່ເກີດເພື່ອອັບຣາຮາມ. ເພິ່ນເປັນຜູ້ປູທາງໃຫ້ພຣະເຢຊູ ແລະ ປະຕິບັດພາລະກິດຫຼາຍຢ່າງ, ແຕ່ເພິ່ນບໍ່ແມ່ນພຣະເຈົ້າ. ກົງກັນຂ້າມ, ເພິ່ນເປັນໜຶ່ງໃນຜູ້ປະກາດພຣະທຳ ເພາະເພິ່ນພຽງແຕ່ປູທາງໃຫ້ພຣະເຢຊູ. ພາລະກິດຂອງເພິ່ນກໍຍິ່ງໃຫຍ່ເຊັ່ນກັນ ແລະ ຫຼັງຈາກທີ່ເພິ່ນໄດ້ປູທາງໄວ້ແລ້ວ ພຣະເຢຊູຈຶ່ງເລີ່ມຕົ້ນພາລະກິດຂອງພຣະອົງຢ່າງເປັນທາງການ. ສິ່ງທີ່ສຳຄັນທີ່ສຸດກໍຄື ເພິ່ນພຽງແຕ່ເຮັດວຽກເພື່ອພຣະເຢຊູ ແລະ ພາລະກິດທີ່ເພິ່ນປະຕິບັດກໍເປັນການຮັບໃຊ້ພາລະກິດຂອງພຣະເຢຊູ. ຫຼັງຈາກທີ່ເພິ່ນສຳເລັດການປູທາງ, ພຣະເຢຊູກໍເລີ່ມຕົ້ນພາລະກິດຂອງພຣະອົງ ເຊິ່ງເປັນພາລະກິດທີ່ໃໝ່ກວ່າ, ມີຕົວຕົນຫຼາຍຂຶ້ນ ແລະ ມີລາຍລະອຽດຫຼາຍຂຶ້ນ. ໂຢຮັນພຽງແຕ່ປະຕິບັດສ່ວນທຳອິດຂອງພາລະກິດ; ສຳລັບສ່ວນໃຫຍ່ຂອງພາລະກິດໃໝ່ນັ້ນ ແມ່ນຖືກປະຕິບັດໂດຍພຣະເຢຊູ. ໂຢຮັນປະຕິບັດພາລະກິດໃໝ່ເຊັ່ນກັນ ແຕ່ເພິ່ນບໍ່ແມ່ນຄົນທີ່ເລີ່ມຕົ້ນຍຸກໃໝ່. ໂຢຮັນເກີດດ້ວຍຄຳສັນຍາ ແລະ ຊື່ຂອງເພິ່ນກໍຖືກມອບໃຫ້ໂດຍທູດສະຫວັນ. ໃນເວລານັ້ນ, ບາງຄົນຕ້ອງການຕັ້ງຊື່ເພິ່ນຕາມພໍ່ຂອງເພິ່ນ ເຊກາຣິຢາ, ແຕ່ແມ່ຂອງເພິ່ນເວົ້າຂຶ້ນວ່າ "ເດັກນ້ອຍຄົນນີ້ບໍ່ສາມາດຖືກຕັ້ງຊື່ນັ້ນໄດ້. ລາວຄວນຖືກເອີ້ນວ່າ ໂຢຮັນ". ສິ່ງນີ້ລ້ວນແລ້ວແຕ່ເປັນຄຳສັ່ງຂອງພຣະວິນຍານບໍລິສຸດ. ພຣະເຢຊູກໍຖືກຕັ້ງຊື່ຕາມຄຳສັ່ງຂອງພຣະວິນຍານບໍລິສຸດເຊັ່ນກັນ, ແຕ່ພຣະອົງເກີດຈາກພຣະວິນຍານບໍລິສຸດ ແລະ ພຣະອົງຖືກສັນຍາດ້ວຍພຣະວິນຍານບໍລິສຸດ. ພຣະເຢຊູເປັນພຣະເຈົ້າ, ພຣະຄຣິດ ແລະ ບຸດມະນຸດ. ແຕ່ໃນເມື່ອພາລະກິດຂອງໂຢຮັນກໍຍິ່ງໃຫຍ່ເຊັ່ນກັນ ແລ້ວເປັນຫຍັງເພິ່ນຈຶ່ງບໍ່ຖືກເອີ້ນວ່າພຣະເຈົ້າ? ແມ່ນຫຍັງຄືຄວາມແຕກຕ່າງແທ້ຈິງລະຫວ່າງພາລະກິດທີ່ພຣະເຢຊູປະຕິບັດ ແລະ ພາລະກິດທີ່ໂຢຮັນປະຕິບັດ? ເປັນຍ້ອນເຫດຜົນດຽວທີ່ວ່າໂຢຮັນຄືຄົນປູທາງໃຫ້ພຣະເຢຊູບໍ? ຫຼື ເປັນຍ້ອນວ່າ ສິ່ງທັງໝົດນີ້ແມ່ນຖືກກຳນົດໄວ້ລ່ວງໜ້າໂດຍພຣະເຈົ້າແລ້ວ? ເຖິງແມ່ນວ່າ ໂຢຮັນໄດ້ເວົ້າວ່າ "ພວກເຈົ້າຈົ່ງສຳນຶກຜິດ ຍ້ອນອານາຈັກແຫ່ງສະຫວັນໃກ້ມາເຖິງແລ້ວ" ແລະ ເພິ່ນກໍໄດ້ເທດສະໜາຂ່າວປະເສີດແຫ່ງອານາຈັກສະຫວັນເຊັ່ນກັນ, ແຕ່ພາລະກິດຂອງເພິ່ນກໍບໍ່ໄດ້ພັດທະນາເພີ່ມເຕີມ ແລະ ພຽງແຕ່ກໍ່ຕັ້ງເປັນຈຸດເລີ່ມຕົ້ນເທົ່ານັ້ນ. ໃນທາງກົງກັນຂ້າມ, ພຣະເຢຊູເລີ່ມຕົ້ນຍຸກໃໝ່ພ້ອມທັງນຳຍຸກເກົ່າມາສູ່ຈຸດສິ້ນສຸດ ແລະ ນອກຈາກນັ້ນ ພຣະອົງຍັງປະຕິບັດກົດລະບຽບແຫ່ງພຣະສັນຍາເດີມອີກດ້ວຍ. ພາລະກິດທີ່ພຣະອົງປະຕິບັດແມ່ນຍິ່ງໃຫຍ່ກວ່າພາລະກິດຂອງໂຢຮັນ ແລະ ຍິ່ງໄປກວ່ານັ້ນ ພຣະອົງໄດ້ມາເພື່ອໄຖ່ມະນຸດຊາດທັງປວງ, ພຣະອົງເຮັດໃຫ້ຂັ້ນຕອນນັ້ນຂອງພາລະກິດສຳເລັດ. ແຕ່ສຳລັບໂຢຮັນ, ເພິ່ນພຽງແຕ່ຈັດກຽມຫົນທາງ. ເຖິງແມ່ນພາລະກິດຂອງເພິ່ນກໍຍິ່ງໃຫຍ່,

ຄຳເວົ້າຂອງເພິ່ນກໍມີຫຼາຍ ແລະ ອັກຄະສາວົກທີ່ຕິດຕາມເພິ່ນກໍມີຫຼາຍເຊັ່ນກັນ, ພາລະກິດຂອງເພິ່ນປະຕິບັດແມ່ນພຽງນຳເອົາຈຸດເລີ່ມຕົ້ນໃໝ່ມາສູ່ມະນຸດເທົ່ານັ້ນ. ມະນຸດບໍ່ເຄີຍໄດ້ຮັບຊີວິດ, ຫົນທາງ ຫຼື ຄວາມຈິງຢ່າງເລິກເຊິ່ງຈາກເພິ່ນ ຫຼື ມະນຸດບໍ່ເຄີຍໄດ້ຮັບການເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າຜ່ານເພິ່ນຈັກເທື່ອ. ໂຢຮັນເປັນຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ (ເອລີຢາ) ຜູ້ເຊິ່ງເປີດເຜີຍສະໜາມໃໝ່ໃຫ້ກັບພາລະກິດຂອງພຣະເຢຊູ ແລະ ຈັດຕຽມຄົນທີ່ຖືກເລືອກ; ເພິ່ນເປັນຜູ້ບຸກເບີກທາງໃຫ້ກັບຍຸກແຫ່ງພຣະຄຸນ. ເລື່ອງດັ່ງກ່າວບໍ່ສາມາດແຍກແຍະໄດ້ຈາກການສັງເກດພຽງແຕ່ຮູບຮ່າງພາຍນອກທຳມະດາຂອງພວກເຂົາເທົ່ານັ້ນ. ສິ່ງນີ້ຍິ່ງເປັນຈິງຫຼາຍຂຶ້ນ ໃນເມື່ອໂຢຮັນກໍໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍພໍສົມຄວນ ແລະ ຍິ່ງໄປກວ່ານັ້ນ ເພິ່ນຖືກສັນຍາໂດຍພຣະວິນຍານບໍລິສຸດ ແລະ ພາລະກິດຂອງເພິ່ນກໍໄດ້ຮັບການສິ່ງເສີມໂດຍພຣະວິນຍານບໍລິສຸດເຊັ່ນກັນ. ເມື່ອເປັນດັ່ງນີ້, ຕ້ອງເບິ່ງຜ່ານພາລະກິດທີ່ພວກເຂົາປະຕິບັດເທົ່ານັ້ນ ຜູ້ຄົນຈຶ່ງຈະສາມາດແຍກແຍະຕົວຕົນຂອງພວກເຂົາໄດ້, ຍ້ອນບໍ່ມີທາງທີ່ຈະແຍກແຍະແກ່ນແທ້ຂອງມະນຸດຈາກຮູບຮ່າງພາຍນອກຂອງເຂົາ ຫຼື ບໍ່ມີທາງທີ່ມະນຸດຈະຄົ້ນຫາໃຫ້ແນ່ໃຈວ່າແມ່ນຫຍັງຄືຄຳພະຍານຂອງພຣະວິນຍານບໍລິສຸດ. ພາລະກິດທີ່ໂຢຮັນປະຕິບັດ ແລະ ພາລະກິດທີ່ພຣະເຢຊູປະຕິບັດບໍ່ໄດ້ຄືກັນ ພ້ອມທັງມີທຳມະຊາດທີ່ແຕກຕ່າງກັນ. ການທີ່ຄົນໜຶ່ງກຳນົດວ່າເຂົາເປັນພຣະເຈົ້າ ຫຼື ບໍ່ນັ້ນ ກໍແມ່ນມາຈາກສິ່ງນີ້. ພາລະກິດຂອງພຣະເຢຊູແມ່ນການເລີ່ມຕົ້ນ, ການສືບຕໍ່, ການເຮັດໃຫ້ສຳເລັດ ແລະ ການເຮັດໃຫ້ບັນລຸຜົນ. ພຣະອົງປະຕິບັດແຕ່ລະຂັ້ນຕອນເຫຼົ່ານີ້ໃນຂະນະທີ່ພາລະກິດຂອງໂຢຮັນເປັນພຽງການສ້າງຈຸດເລີ່ມຕົ້ນ. ໃນຕອນເລີ່ມຕົ້ນ, ພຣະເຢຊູເຜີຍແຜ່ຂ່າວປະເສີດ ແລະ ເທດສະໜາກ່ຽວກັບວິທີແຫ່ງການກັບໃຈ ແລະ ຫຼັງຈາກນັ້ນກໍໃຫ້ບັບຕິດສະມາແກ່ມະນຸດ, ຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ. ສຸດທ້າຍ, ພຣະອົງກໍໄດ້ໄຖ່ມະນຸດຊາດຈາກຄວາມບາບ ແລະ ເຮັດໃຫ້ພາລະກິດຂອງພຣະອົງໃນຍຸກນັ້ນສຳເລັດລົງ. ພຣະອົງຍັງເດີນທາງໄປມາທົ່ວທຸກຫົນແຫ່ງ, ເທດສະໜາຕໍ່ມະນຸດ ແລະ ເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນ. ໃນກໍລະນີນີ້ ພຣະອົງ ແລະ ໂຢຮັນແມ່ນຄືກັນ, ແຕ່ຄວາມແຕກຕ່າງກໍຄື ພຣະເຢຊູເລີ່ມຕົ້ນຍຸກໃໝ່ ແລະ ນຳຍຸກແຫ່ງພຣະຄຸນມາສູ່ມະນຸດ. ຈາກປາກຂອງພຣະອົງແມ່ນເຕັມໄປດ້ວຍພຣະທຳກ່ຽວກັບສິ່ງທີ່ມະນຸດຄວນປະຕິບັດຕາມ ແລະ ຫົນທາງທີ່ມະນຸດຄວນຕິດຕາມໃນຍຸກແຫ່ງພຣະຄຸນ ແລະ ໃນທີ່ສຸດແລ້ວ ພຣະອົງກໍເຮັດໃຫ້ພາລະກິດແຫ່ງການໄຖ່ບາບສຳເລັດລົງ. ໂຢຮັນບໍ່ເຄີຍປະຕິບັດພາລະກິດນີ້ຈັກເທື່ອ. ດ້ວຍເຫດນັ້ນຈຶ່ງເປັນພຣະເຢຊູທີ່ປະຕິບັດພາລະກິດຂອງພຣະເຈົ້າເອງ ແລະ ແມ່ນພຣະອົງເອງທີ່ເປັນພຣະເຈົ້າ ແລະ ຜູ້ເຊິ່ງເປັນຕົວແທນໃຫ້ກັບພຣະເຈົ້າໂດຍກົງ. ແນວຄິດຂອງມະນຸດບອກວ່າທຸກຄົນທີ່ເກີດໂດຍພຣະສັນຍາ, ເກີດຈາກພຣະວິນຍານ, ໄດ້ຮັບການສິ່ງເສີມຈາກພຣະວິນຍານບໍລິສຸດ ແລະ ຜູ້ເຊິ່ງເປີດເຜີຍຫົນທາງໃໝ່ອອກກໍເປັນພຣະເຈົ້າໄດ້. ອີງຕາມການໃຫ້ເຫດຜົນແບບນີ້, ໂຢຮັນກໍຈະເປັນພຣະເຈົ້າເຊັ່ນກັນ ແລະ ໂມເຊ, ອັບຣາຮາມ ແລະ ດາວິດ... ພວກເຂົາກໍຈະລ້ວນແລ້ວແຕ່ເປັນພຣະເຈົ້າເຊັ່ນກັນ. ນີ້ບໍ່ແມ່ນເລື່ອງຕະລົກທີ່ສຸດບໍ?

ກ່ອນທີ່ຈະປະຕິບັດພັນທະກິດຂອງພຣະອົງ, ພຣະເຢຊູກໍເປັນພຽງແຕ່ມະນຸດທຳມະດາເຊັ່ນກັນທີ່

ເຮັດຕາມທຸກສິ່ງທີ່ພຣະວິນຍານເຮັດ. ບໍ່ວ່າພຣະອົງຈະຮູ້ຈັກຕົວຕົນຂອງພຣະອົງເອງ ຫຼື ບໍ່ ໃນເວລານັ້ນ, ພຣະອົງກໍເຊື່ອຟັງທຸກສິ່ງທີ່ມາຈາກພຣະເຈົ້າ. ພຣະວິນຍານບໍລິສຸດບໍ່ເຄີຍເປີດເຜີຍຕົວຕົນຂອງພຣະອົງກ່ອນທີ່ຈະເລີ່ມຕົ້ນພັນທະກິດຂອງພຣະອົງ. ພຽງແຕ່ຫຼັງຈາກທີ່ພຣະອົງເລີ່ມຕົ້ນພັນທະກິດຂອງພຣະອົງ ພຣະອົງຈຶ່ງຍົກເລີກກົດລະບຽບເຫຼົ່ານັ້ນ ແລະ ກົດເກນເຫຼົ່ານັ້ນ ແລະ ຈົນເຖິງເວລາທີ່ພຣະອົງເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງຢ່າງເປັນທາງການ ພຣະທຳຂອງພຣະອົງຈຶ່ງເລີ່ມເຕັມໄປດ້ວຍສິດອຳນາດ ແລະ ລິດອຳນາດ. ຫຼັງຈາກທີ່ພຣະອົງເລີ່ມຕົ້ນພັນທະກິດຂອງພຣະອົງເທົ່ານັ້ນ ພາລະກິດຂອງພຣະອົງໃນການລິເລີ່ມຍຸກໃໝ່ຈຶ່ງເລີ່ມຕົ້ນຂຶ້ນ. ກ່ອນໜ້ານີ້, ພຣະວິນຍານບໍລິສຸດແມ່ນສະຖິດຢ່າງລີ້ລັບຢູ່ໃນພຣະອົງເປັນເວລາ 29 ປີ, ໃນເວລານັ້ນ ພຣະອົງເປັນຕົວແທນໃຫ້ກັບມະນຸດເທົ່ານັ້ນ ແລະ ບໍ່ໄດ້ມີຕົວຕົນຂອງພຣະເຈົ້າ. ພາລະກິດຂອງພຣະເຈົ້າເລີ່ມຕົ້ນດ້ວຍການທີ່ພຣະອົງປະຕິບັດພາລະກິດ ແລະ ປະຕິບັດພັນທະກິດຂອງພຣະອົງ, ພຣະອົງປະຕິບັດພາລະກິດຂອງພຣະອົງຕາມແຜນການທີ່ຢູ່ໃນໃຈຂອງພຣະອົງ ໂດຍບໍ່ຄຳນຶງເຖິງວ່າມະນຸດຮູ້ຈັກພຣະອົງຫຼາຍສໍ່າໃດ ແລະ ພາລະກິດທີ່ພຣະອົງປະຕິບັດນັ້ນ ກໍເປັນການສະແດງອອກເຖິງພຣະເຈົ້າໂດຍກົງ. ໃນເວລານັ້ນ, ພຣະເຢຊູຖາມຄົນທີ່ຢູ່ອ້ອມຂ້າງພຣະອົງວ່າ "ພວກເຈົ້າຄິດວ່າເຮົາແມ່ນຜູ້ໃດ?" ພວກເຂົາຕອບວ່າ "ພຣະອົງເປັນຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ທີ່ສຸດ ແລະ ເປັນສາສະດາຈານທີ່ດີເລີດຂອງພວກຂ້ານ້ອຍ". ບາງຄົນກໍຕອບວ່າ "ພຣະອົງເປັນປະໂລຫິດສູງສຸດຂອງພວກຂ້ານ້ອຍ"... ແຕ່ລະຄົນແມ່ນຕອບຄຳຖາມແຕກຕ່າງກັນໄປ, ບາງຄົນເຖິງກັບເວົ້າວ່າ ພຣະອົງເປັນໂຢຮັນ, ພຣະອົງເປັນເອລີຢາ. ຫຼັງຈາກນັ້ນ ພຣະເຢຊູຈຶ່ງຫັນໄປຫາຊີໂມນເປໂຕ ແລະ ຖາມວ່າ "ເຈົ້າຄິດວ່າເຮົາແມ່ນຜູ້ໃດ?" ເປໂຕຕອບວ່າ "ທ່ານເປັນພຣະຄຣິດ, ເປັນພຣະບຸດຂອງພຣະເຈົ້າຜູ້ມີຊີວິດຢູ່". ຕັ້ງແຕ່ນັ້ນເປັນຕົ້ນໄປ, ຜູ້ຄົນຈຶ່ງຮູ້ວ່າ ພຣະອົງເປັນພຣະເຈົ້າ. ເມື່ອຕົວຕົນຂອງພຣະອົງຖືກເປີດເຜີຍ, ມັນແມ່ນເປໂຕທີ່ເປັນຄົນທຳອິດທີ່ຮູ້ຈັກເລື່ອງນີ້ ແລະ ເລື່ອງນີ້ກໍຖືກເວົ້າອອກຈາກປາກຂອງເພິ່ນ. ດັ່ງນັ້ນ ພຣະເຢຊູຈຶ່ງກ່າວວ່າ "ສິ່ງທີ່ເຈົ້າເວົ້ານັ້ນບໍ່ແມ່ນຖືກເປີດເຜີຍໂດຍເນື້ອໜັງ ແລະ ເລືອດ, ແຕ່ໂດຍພຣະບິດາຂອງເຮົາ". ຫຼັງຈາກການຮັບບັບຕິສະມາຂອງພຣະອົງ, ບໍ່ວ່າຄົນອື່ນຈະຮູ້ຈັກສິ່ງນີ້ ຫຼື ບໍ່, ພາລະກິດທີ່ພຣະອົງປະຕິບັດແມ່ນຕາງໜ້າພຣະເຈົ້າ. ພຣະອົງມາເພື່ອປະຕິບັດພາລະກິດຂອງພຣະອົງ ບໍ່ແມ່ນເພື່ອເປີດເຜີຍຕົວຕົນຂອງພຣະອົງ. ພຽງແຕ່ຫຼັງຈາກທີ່ເປໂຕເວົ້າເຖິງສິ່ງນີ້ ຕົວຕົນຂອງພຣະອົງຈຶ່ງຖືກເປີດເຜີຍຕໍ່ມະນຸດ. ບໍ່ວ່າເຈົ້າຈະຮູ້ວ່າ ພຣະອົງເປັນພຣະເຈົ້າ ຫຼື ບໍ່, ເມື່ອເວລາມາເຖິງ ພຣະອົງກໍເລີ່ມຕົ້ນພາລະກິດຂອງພຣະອົງ. ບໍ່ວ່າເຈົ້າຈະຮູ້ສິ່ງນັ້ນ ຫຼື ບໍ່, ພຣະອົງແມ່ນສືບຕໍ່ປະຕິບັດພາລະກິດຂອງພຣະອົງຄືດັ່ງຜ່ານມາ. ເຖິງແມ່ນເຈົ້າປະຕິເສດມັນ, ພຣະອົງກໍຈະປະຕິບັດພາລະກິດຂອງພຣະອົງ ແລະ ຈະປະຕິບັດພາລະກິດນັ້ນ ເມື່ອມັນເຖິງເວລາ. ພຣະອົງມາເພື່ອປະຕິບັດພາລະກິດຂອງພຣະອົງ ແລະ ປະຕິບັດພັນທະກິດຂອງພຣະອົງ, ບໍ່ແມ່ນເພື່ອໃຫ້ມະນຸດຮູ້ຈັກເນື້ອໜັງຂອງພຣະອົງ ແຕ່ເພື່ອໃຫ້ມະນຸດຮັບເອົາພາລະກິດຂອງພຣະອົງ. ຖ້າເຈົ້າບໍ່ສາມາດເຂົ້າໃຈວ່າ ຂັ້ນຕອນຂອງພາລະກິດໃນປັດຈຸບັນນີ້ແມ່ນພາລະກິດຂອງພຣະເຈົ້າເອງ, ນັ້ນກໍຍ້ອນວ່າ ເຈົ້າຂາດນິມິດ. ເຖິງຢ່າງໃດກໍຕາມ ເຈົ້າບໍ່ສາມາດປະຕິເສດຂັ້ນຕອນນີ້ຂອງພາລະກິດ

ໄດ້; ຄວາມລົ້ມເຫຼວໃນການເຂົ້າໃຈໃນສິ່ງນັ້ນບໍ່ໄດ້ພິສູດວ່າພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດ ຫຼື ພາລະກິດຂອງພຣະອົງຜິດພາດ. ມີຄົນທີ່ເຖິງກັບວ່າກວດສອບພາລະກິດໃນປັດຈຸບັນໃສ່ກັບພາລະກິດຂອງພຣະເຢຊູໃນພຣະຄຳພີ ແລະ ໃຊ້ຄວາມບໍ່ສອດຄ່ອງກັນເພື່ອປະຕິເສດຂັ້ນຕອນນີ້ຂອງພາລະກິດ. ນີ້ບໍ່ແມ່ນການກະທຳຂອງຄົນຕາບອດບໍ? ສິ່ງຕ່າງໆທີ່ຖືກບັນທຶກໃນພຣະຄຳພີແມ່ນມີຈຳກັດ; ສິ່ງເຫຼົ່ານັ້ນບໍ່ສາມາດເປັນຕົວແທນໃຫ້ກັບພາລະກິດທັງໝົດຂອງພຣະເຈົ້າໄດ້. ພຣະກິດຕິຄຸນທັງສີ່ຮ່ວມກັນມີໜ້ອຍກວ່າໜຶ່ງຮ້ອຍບົດ ທີ່ຂຽນເຖິງເຫດການໃນຈຳນວນທີ່ຈຳກັດ ເຊັ່ນ: ການທີ່ພຣະເຢຊູສາບແຊ່ງຕົ້ນເດື່ອ, ການທີ່ເປໂຕປະຕິເສດພຣະຜູ້ເປັນເຈົ້າສາມຄັ້ງ, ການທີ່ພຣະເຢຊູປາກົດຕົວຕໍ່ອັກຄະສາວົກຫຼັງຈາກຖືກຄຶງເທິງໄມ້ກາງແຂນ ແລະ ການຟື້ນຄືນຊີບຂອງພຣະອົງ, ຄຳສັ່ງສອນກ່ຽວກັບການຖືອົດອາຫານ, ຄຳສັ່ງສອນກ່ຽວກັບຄຳອະທິຖານ, ຄຳສັ່ງສອນກ່ຽວກັບການຢ່າຮ້າງ, ການກຳເນີດ ແລະ ວົງຕະກູນຂອງພຣະເຢຊູ, ການແຕ່ງຕັ້ງສາວົກຂອງພຣະເຢຊູ ແລະ ອື່ນໆອີກ. ເຖິງຢ່າງໃດກໍຕາມ ມະນຸດເຊີດຊູສິ່ງເຫຼົ່ານັ້ນເປັນຊັບສົມບັດ ເຖິງກັບປຽບທຽບພາລະກິດໃນປັດຈຸບັນໃສ່ກັບສິ່ງເຫຼົ່ານັ້ນ. ພວກເຂົາເຖິງກັບເຊື່ອວ່າ ພາລະກິດທັງໝົດທີ່ພຣະເຢຊູປະຕິບັດໃນຊີວິດຂອງພຣະອົງມີຫຼາຍພຽງແຕ່ສໍ່ານັ້ນ ຄືກັນກັບວ່າພຣະເຈົ້າພຽງແຕ່ສາມາດປະຕິບັດຫຼາຍສໍ່ານີ້ ແລະ ບໍ່ມີຫຼາຍກວ່ານີ້ອີກ. ນີ້ບໍ່ແມ່ນເລື່ອງໄຮ້ເຫດຜົນທີ່ສຸດບໍ?

ເວລາທີ່ພຣະເຢຊູມີຢູ່ເທິງແຜ່ນດິນໂລກແມ່ນສາມສິບສາມປີເຄິ່ງ ນັ້ນກໍຄື ພຣະອົງດຳລົງຊີວິດຢູ່ເທິງໂລກເປັນເວລາສາມສິບສາມປີເຄິ່ງ. ມີພຽງແຕ່ສາມປີເຄິ່ງຂອງສາມສິບສາມປີທີ່ຖືກໃຊ້ເພື່ອປະຕິບັດພັນທະກິດຂອງພຣະອົງ; ສ່ວນເວລາທີ່ເຫຼືອແມ່ນພຣະອົງດຳລົງຊີວິດແບບມະນຸດທຳມະດາ. ໃນຕອນເລີ່ມຕົ້ນ, ພຣະອົງເຂົ້າຮ່ວມພິທີສາສະໜາໃນທຳມະສາລາ ແລະ ໃນທີ່ນັ້ນ ພຣະອົງໄດ້ຟັງການອະທິບາຍຂໍ້ພຣະທຳຂອງປະໂລຫິດ ແລະ ຄຳເທດສະໜາຂອງຄົນອື່ນໆ. ພຣະອົງໄດ້ຮັບຄວາມຮູ້ຫຼາຍຢ່າງກ່ຽວກັບພຣະຄຳພີ: ພຣະອົງບໍ່ໄດ້ເກີດມາພ້ອມກັບຄວາມຮູ້ດັ່ງກ່າວ ແລະ ພຽງແຕ່ໄດ້ຮັບມັນຜ່ານທາງການອ່ານ ແລະ ການຟັງ. ມັນຖືກບັນທຶກໄວ້ໃນພຣະຄຳພີຢ່າງຊັດເຈນວ່າ ພຣະອົງໄດ້ຖາມຄຳຖາມກັບອາຈານໃນທຳມະສາລາເມື່ອອາຍຸສິບສອງປີ: ແມ່ນຫຍັງຄືຄຳທຳນາຍຂອງຜູ້ປະກາດພຣະທຳບູຮານ? ແມ່ນຫຍັງຄືກົດລະບຽບຂອງໂມເຊ? ແມ່ນຫຍັງຄືພຣະສັນຍາເດີມ? ແລ້ວແມ່ນໃຜທີ່ຮັບໃຊ້ພຣະເຈົ້າດ້ວຍເສື້ອຄຸມປະໂລຫິດໃນພຣະວິຫານ? ... ພຣະອົງຖາມຫຼາຍຄຳຖາມ ຍ້ອນພຣະອົງບໍ່ມີຄວາມຮູ້ ຫຼື ຄວາມເຂົ້າໃຈເລີຍ. ເຖິງແມ່ນພຣະອົງຖືກປະຕິສົນທິໂດຍພຣະວິນຍານບໍລິສຸດ, ພຣະອົງກໍກຳເນີດເປັນມະນຸດທຳມະດາທັງສິ້ນ; ເຖິງແມ່ນວ່າ ພຣະອົງຈະມີລັກສະນະພິເສດໂດຍສະເພາະ ພຣະອົງກໍຍັງເປັນມະນຸດທຳມະດາ. ສະຕິປັນຍາຂອງພຣະອົງເຕີບໃຫຍ່ຂຶ້ນຕາມສັດສ່ວນຂອງວຸດທິພາວະຂອງພຣະອົງ ແລະ ອາຍຸຂອງພຣະອົງ ແລະ ພຣະອົງໄດ້ຜ່ານພາວະຕ່າງໆຂອງຊີວິດມະນຸດທຳມະດາ. ໃນຈິນຕະນາການຂອງມະນຸດ, ພຣະເຢຊູບໍ່ໄດ້ຜ່ານຊ່ວງທີ່ເປັນເດັກນ້ອຍ ແລະ ໄວໜຸ່ມ; ພຣະອົງເລີ່ມຕົ້ນດຳລົງຊີວິດເປັນຜູ້ຊາຍສາມສິບປີທັນທີທີ່ພຣະອົງເກີດມາ ແລະ ພຣະອົງຖືກຄຶງເທິງໄມ້ກາງແຂນເມື່ອສຳເລັດພາລະກິດຂອງພຣະອົງ. ພຣະອົງອາດບໍ່ໄດ້ຜ່ານພາວະຕ່າງໆໃນຊີວິດຂອງມະນຸດທຳມະດາ;

ພຣະອົງບໍ່ໄດ້ກິນ ຫຼື ຄົບຄ້າສະມາຄົມກັບມະນຸດຄົນອື່ນ ແລະ ມັນກໍບໍ່ໄດ້ງ່າຍສຳລັບມະນຸດທີ່ຈະເຫັນພຣະອົງແມ່ນແຕ່ນາທີດຽວ. ພຣະອົງອາດເປັນຄົນຜິດປົກກະຕິ ທີ່ເຮັດໃຫ້ຜູ້ຄົນທີ່ເຫັນພຣະອົງພາກັນຢ້ານກົວ ເພາະວ່າ ພຣະອົງເປັນພຣະເຈົ້າ. ມະນຸດເຊື່ອວ່າພຣະເຈົ້າທີ່ມາສະຖິດຢູ່ໃນເນື້ອໜັງບໍ່ໄດ້ດຳລົງຊີວິດແບບມະນຸດທຳມະດາຢ່າງແນ່ນອນ; ພວກເຂົາເຊື່ອວ່າພຣະອົງສະອາດ ໂດຍບໍ່ຕ້ອງຖູແຂ້ວຂອງພຣະອົງ ຫຼື ລ້າງໜ້າຂອງພຣະອົງ, ຍ້ອນວ່າ ພຣະອົງເປັນບຸກຄົນທີ່ບໍລິສຸດ. ສິ່ງເຫຼົ່ານີ້ບໍ່ແມ່ນແນວຄິດຂອງມະນຸດທັງໝົດບໍ? ພຣະຄຳພີບໍ່ໄດ້ບັນທຶກເຖິງຊີວິດຂອງພຣະເຢຊູໃນຖານະເປັນມະນຸດ ພຽງແຕ່ບັນທຶກພາລະກິດຂອງພຣະອົງ, ແຕ່ສິ່ງນີ້ກໍບໍ່ໄດ້ພິສູດວ່າພຣະອົງບໍ່ມີຄວາມເປັນມະນຸດທຳມະດາ ຫຼື ພຣະອົງບໍ່ໄດ້ດຳລົງຊີວິດແບບມະນຸດທຳມະດາກ່ອນທີ່ຈະຮອດອາຍຸສາມສິບປີ. ພຣະອົງເລີ່ມຕົ້ນພາລະກິດຂອງພຣະອົງຢ່າງເປັນທາງການຕອນພຣະອົງໄດ້ອາຍຸ 29 ປີ, ແຕ່ເຈົ້າບໍ່ສາມາດເບິ່ງຂ້າມຊີວິດທັງໝົດຂອງພຣະອົງທີ່ເປັນມະນຸດໃນໄລຍະຊາວເກົ້າປີນັ້ນໄດ້. ພຣະຄຳພີພຽງແຕ່ຕັດຊ່ວງໄລຍະນັ້ນອອກຈາກການບັນທຶກເທົ່ານັ້ນ; ຍ້ອນວ່າຊີວິດຂອງພຣະອົງແມ່ນຢູ່ໃນຖານະທີ່ເປັນມະນຸດທຳມະດາ ແລະ ບໍ່ແມ່ນຊ່ວງໄລຍະພາລະກິດອັນສັກສິດຂອງພຣະອົງ, ຈຶ່ງບໍ່ຈຳເປັນຕ້ອງຂຽນມັນລົງ. ຍ້ອນວ່າ ກ່ອນການຮັບບັບຕິດສະມາຂອງພຣະເຢຊູ, ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດໂດຍກົງ, ແຕ່ພຽງຮັກສາພຣະອົງຢູ່ໃນຊີວິດແບບມະນຸດທຳມະດາຈົນເຖິງມື້ທີ່ພຣະເຢຊູຕ້ອງປະຕິບັດພັນທະກິດຂອງພຣະອົງ. ເຖິງແມ່ນວ່າພຣະອົງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ, ພຣະອົງແມ່ນໄດ້ຜ່ານຂະບວນການເຕີບໃຫຍ່ແບບມະນຸດທຳມະດາ. ຂະບວນການຂອງການເຕີບໃຫຍ່ນີ້ແມ່ນຖືກຕັດອອກຈາກພຣະຄຳພີ. ມັນຖືກຕັດອອກກໍເພາະວ່າ ມັນບໍ່ສາມາດສະໜອງຄວາມຊ່ວຍເຫຼືອທີ່ຍິ່ງໃຫຍ່ສຳລັບການເຕີບໂຕໃນຊີວິດຂອງມະນຸດໄດ້. ຊ່ວງໄລຍະເວລາກ່ອນການຮັບບັບຕິດສະມາຂອງພຣະອົງເປັນຊ່ວງໄລຍະເວລາທີ່ຖືກເຊື່ອງໄວ້ ເຊິ່ງເປັນຊ່ວງໄລຍະເວລາທີ່ພຣະອົງບໍ່ໄດ້ປະຕິບັດໝາຍສຳຄັນ ແລະ ການອັດສະຈັນ. ພຽງແຕ່ຫຼັງຈາກການຮັບບັບຕິດສະມາຂອງພຣະອົງ ພຣະເຢຊູຈຶ່ງເລີ່ມຕົ້ນພາລະກິດທັງໝົດເພື່ອການໄຖ່ບາບຂອງມະນຸດຊາດ, ພາລະກິດທີ່ອຸດົມສົມບູນ ແລະ ເຕັມໄປດ້ວຍຄວາມກະລຸນາ, ຄວາມຈິງ ແລະ ຄວາມຮັກ ແລະ ຄວາມເມດຕາ. ການເລີ່ມຕົ້ນຂອງພາລະກິດນີ້ຍັງເປັນການເລີ່ມຕົ້ນຂອງຍຸກແຫ່ງພຣະຄຸນອີກດ້ວຍ; ຍ້ອນເຫດຜົນນີ້, ມັນຈຶ່ງຖືກຂຽນລົງ ແລະ ສິ່ງຕໍ່ຈົນເຖິງປັດຈຸບັນ. ມັນແມ່ນເພື່ອເປີດຫົນທາງ ແລະ ເຮັດໃຫ້ທຸກສິ່ງບັນລຸຜົນເພື່ອຄົນໃນຍຸກແຫ່ງພຣະຄຸນຈະໄດ້ຍ່າງໃນເສັ້ນທາງຂອງຍຸກແຫ່ງພຣະຄຸນ ແລະ ເສັ້ນທາງແຫ່ງໄມ້ກາງແຂນ. ເຖິງແມ່ນມັນມາຈາກການບັນທຶກທີ່ຖືກຂຽນຂຶ້ນໂດຍມະນຸດ, ທຸກສິ່ງກໍເປັນຄວາມຈິງ ຍົກເວັ້ນຈະຄົ້ນພົບຂໍ້ຜິດພາດເລັກນ້ອຍຢູ່ນີ້ ແລະ ຢູ່ນັ້ນ. ເຖິງແມ່ນເປັນແບບນັ້ນກໍຕາມ ການບັນທຶກເຫຼົ່ານີ້ບໍ່ສາມາດເວົ້າໄດ້ວ່າເປັນສິ່ງທີ່ບໍ່ແມ່ນຄວາມຈິງ. ສິ່ງຕ່າງໆຄືຄວາມຈິງທັງໝົດ, ພຽງແຕ່ເມື່ອຂຽນສິ່ງເຫຼົ່ານັ້ນລົງ ມະນຸດໄດ້ເຮັດຜິດພາດ. ມີບາງຄົນທີ່ເວົ້າວ່າ ຖ້າພຣະເຢຊູເປັນຄົນທີ່ມີຄວາມເປັນມະນຸດທຳມະດາ ແລະ ປົກກະຕິ, ເປັນໄປໄດ້ແນວໃດທີ່ພຣະອົງຈະສາມາດປະຕິບັດໝາຍສຳຄັນ ແລະ ສິ່ງອັດສະຈັນ? ສີ່ສິບມື້ແຫ່ງການທົດລອງທີ່ພຣະເຢຊູໄດ້ຜະເຊີນກໍເປັນໝາຍສຳຄັນທີ່ອັດສະຈັນ ເປັນສິ່ງໜຶ່ງທີ່ມະນຸດທຳມະດາຈະບໍ່ສາມາດບັນລຸໄດ້. ສີ່ສິບມື້ແຫ່ງການ

ທົດລອງຂອງພຣະອົງແມ່ນຢູ່ໃນທຳມະຊາດຂອງການປະຕິບັດພາລະກິດຂອງພຣະວິນຍານບໍລິສຸດ; ແລ້ວຄົນໜຶ່ງຈະສາມາດເວົ້າໄດ້ແນວໃດວ່າ ບໍ່ມີຄວາມເໜືອທຳມະຊາດໃນຕົວພຣະອົງແມ່ນແຕ່ໜ້ອຍດຽວ? ຄວາມສາມາດໃນການປະຕິບັດໝາຍສຳຄັນ ແລະ ການອັດສະຈັນຂອງພຣະອົງບໍ່ໄດ້ພິສູດວ່າພຣະອົງເປັນມະນຸດທີ່ຢູ່ເໜືອທຳມະຊາດ ແລະ ບໍ່ແມ່ນມະນຸດທຳມະດາ; ມັນພຽງແຕ່ເປັນພຣະວິນຍານບໍລິສຸດເທົ່ານັ້ນທີ່ປະຕິບັດພາລະກິດໃນມະນຸດທຳມະດາແບບພຣະອົງ, ສະນັ້ນຈຶ່ງເປັນໄປໄດ້ສຳລັບພຣະອົງທີ່ຈະປະຕິບັດໃນສິ່ງອັດສະຈັນ ແລະ ແມ່ນແຕ່ປະຕິບັດພາລະກິດທີ່ຍິ່ງໃຫຍ່ຂຶ້ນກວ່າເກົ່າ. ກ່ອນທີ່ພຣະເຢຊູຈະປະຕິບັດພັນທະກິດຂອງພຣະອົງ ຫຼື ຕາມທີ່ພຣະຄຳພີກ່າວວ່າ ກ່ອນທີ່ພຣະວິນຍານບໍລິສຸດຈະລົງມາສູ່ພຣະອົງ, ພຣະເຢຊູເປັນພຽງມະນຸດທຳມະດາ ແລະ ບໍ່ມີທາງທີ່ຈະຢູ່ເໜືອທຳມະຊາດໄດ້. ເມື່ອພຣະວິນຍານບໍລິສຸດລົງມາສູ່ພຣະອົງ ນັ້ນກໍຄື ເມື່ອພຣະອົງເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ, ພຣະອົງແມ່ນເຕັມໄປດ້ວຍຄວາມເໜືອທຳມະຊາດ. ດ້ວຍເຫດນີ້, ມະນຸດຈຶ່ງເຊື່ອວ່າ ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າບໍ່ມີຄວາມເປັນມະນຸດທຳມະດາ; ຍິ່ງໄປກວ່ານັ້ນ ເຂົາຄິດແບບຜິດໆວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດມີພຽງຄວາມເປັນພຣະເຈົ້າ, ບໍ່ມີຄວາມເປັນມະນຸດ. ແນ່ນອນເມື່ອພຣະເຈົ້າມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດຂອງພຣະອົງ ແລະ ທຸກສິ່ງທີ່ມະນຸດເຫັນແມ່ນເຫດການທີ່ເໜືອທຳມະຊາດ. ສິ່ງທີ່ພວກເຂົາເຫັນດ້ວຍຕາຂອງພວກເຂົາ ແລະ ສິ່ງທີ່ພວກເຂົາໄດ້ຍິນດ້ວຍຫູຂອງພວກເຂົາລ້ວນແລ້ວແຕ່ເປັນສິ່ງທີ່ເໜືອທຳມະຊາດ ຍ້ອນພວກເຂົາບໍ່ສາມາດເຂົ້າໃຈ ແລະ ບໍ່ສາມາດບັນລຸພາລະກິດຂອງພຣະອົງ ແລະ ພຣະທຳຂອງພຣະອົງໄດ້. ຖ້າສິ່ງໃດໜຶ່ງໃນສະຫວັນຖືກນຳລົງມາເທິງແຜ່ນດິນໂລກ, ແລ້ວມັນຈະເປັນສິ່ງອື່ນໄປໄດ້ແນວໃດ ຖ້າບໍ່ແມ່ນສິ່ງທີ່ເໜືອທຳມະຊາດ? ເມື່ອຄວາມເລິກລັບແຫ່ງອານາຈັກສະຫວັນຖືກນຳມາເທິງແຜ່ນດິນໂລກ, ຄວາມເລິກລັບທີ່ມະນຸດບໍ່ສາມາດເຂົ້າໃຈ ແລະ ຢັ່ງເຖິງໄດ້, ທີ່ມະຫັດສະຈັນ ແລະ ເຕັມໄປດ້ວຍສະຕິປັນຍາອັນປະເສີດ, ສິ່ງເຫຼົ່ານີ້ບໍ່ແມ່ນລ້ວນແລ້ວແຕ່ເປັນສິ່ງທີ່ເໜືອທຳມະຊາດບໍ? ເຖິງຢ່າງໃດກໍຕາມ, ເຈົ້າຄວນຮູ້ໄວ້ວ່າ ບໍ່ວ່າມັນຈະເໜືອທຳມະຊາດສໍ່າໃດກໍຕາມ, ທຸກສິ່ງຖືກປະຕິບັດພາຍໃນຄວາມເປັນມະນຸດທຳມະດາ. ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າເຕັມໄປດ້ວຍຄວາມເປັນມະນຸດ; ບໍ່ດັ່ງນັ້ນພຣະອົງກໍຈະບໍ່ເປັນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ. ພຣະເຢຊູປະຕິບັດສິ່ງອັດສະຈັນທີ່ຍິ່ງໃຫຍ່ຫຼາຍຢ່າງໃນເວລາຂອງພຣະອົງ. ສິ່ງທີ່ຊາວອິດສະຣາເອນເຫັນໃນເວລານັ້ນກໍເຕັມໄປດ້ວຍສິ່ງທີ່ເໜືອທຳມະຊາດ; ພວກເຂົາເຫັນທູດສະຫວັນ ແລະ ຜູ້ສົ່ງຂ່າວ ແລະ ໄດ້ຍິນສຽງຂອງພຣະເຢໂຮວາ. ສິ່ງນີ້ບໍ່ລ້ວນແລ້ວແຕ່ເປັນສິ່ງທີ່ເໜືອທຳມະຊາດບໍ? ແນ່ນອນ ໃນປັດຈຸບັນ ມີວິນຍານຊົ່ວຮ້າຍບາງຢ່າງທີ່ລໍ້ລວງມະນຸດດ້ວຍສິ່ງທີ່ເໜືອທຳມະຊາດເພື່ອຫຼອກລວງມະນຸດ; ບໍ່ມີຫຍັງນອກຈາກພວກມັນລອກແບບ ເພື່ອຫຼອກລວງມະນຸດຜ່ານທາງພາລະກິດທີ່ບໍ່ໄດ້ຖືກປະຕິບັດໃນປັດຈຸບັນໂດຍພຣະວິນຍານບໍລິສຸດ. ຫຼາຍຄົນປະຕິບັດສິ່ງອັດສະຈັນ ແລະ ປິ່ນປົວຄົນເຈັບປ່ວຍ ແລະ ຂັບໄລ່ຜີຮ້າຍ; ສິ່ງເຫຼົ່ານີ້ເປັນພຽງພາລະກິດຂອງວິນຍານຊົ່ວຮ້າຍ, ຍ້ອນວ່າ ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດດັ່ງກ່າວອີກຕໍ່ໄປໃນຍຸກປັດຈຸບັນ ແລະ ທຸກຄົນທີ່ລອກແບບພາລະກິດຂອງພຣະວິນຍານບໍລິສຸດຕັ້ງແຕ່ເວລານັ້ນ

ເປັນຕົ້ນມາ ພວກເຂົາກໍເປັນວິນຍານຊົ່ວຮ້າຍຢ່າງແນ່ນອນ. ພາລະກິດທຸກຢ່າງທີ່ຖືກປະຕິບັດໃນອິດສະຣາເອນໃນເວລານັ້ນແມ່ນພາລະກິດຂອງທຳມະຊາດທີ່ຢູ່ເໜືອທຳມະຊາດ, ພຽງແຕ່ໃນປັດຈຸບັນພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດແບບນັ້ນອີກແລ້ວ ແລະ ຖ້າມີພາລະກິດແບບດັ່ງກ່າວອີກນັ້ນກໍແມ່ນການກະທຳຂອງຊາຕານ, ການລົບກວນຂອງຊາຕານ ແລະ ມາຈາກວິນຍານຊົ່ວຮ້າຍ. ພາລະກິດທຸກຢ່າງທີ່ຖືກປະຕິບັດໃນອິດສະຣາເອນໃນເວລານັ້ນແມ່ນພາລະກິດຂອງທຳມະຊາດທີ່ຢູ່ເໜືອທຳມະຊາດ, ເຖິງແມ່ນວ່າໃນປັດຈຸບັນ ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດແບບນັ້ນອີກແລ້ວ ແລະ ໃນປັດຈຸບັນ ພາລະກິດແບບດັ່ງກ່າວແມ່ນການຮຽນແບບ ແລະ ການແອບແຝງຂອງຊາຕານ ແລະ ການລົບກວນຂອງມັນ. ແຕ່ເຈົ້າບໍ່ສາມາດເວົ້າໄດ້ວ່າ ແມ່ນຫຍັງກໍຕາມທີ່ເໜືອທຳມະຊາດແມ່ນມາຈາກວິນຍານຊົ່ວຮ້າຍ, ສິ່ງນີ້ແມ່ນຂຶ້ນຢູ່ກັບຍຸກແຫ່ງພາລະກິດຂອງພຣະເຈົ້າ. ໃຫ້ພິຈາລະນາເບິ່ງພາລະກິດທີ່ຖືກປະຕິບັດໂດຍພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນ: ດ້ານໃດຂອງພາລະກິດທີ່ບໍ່ແມ່ນຢູ່ເໜືອທຳມະຊາດ? ເຈົ້າສາມາດເຂົ້າໃຈ ແລະ ບັນລຸພຣະທຳຂອງພຣະອົງ ແລະ ບໍ່ມີມະນຸດຄົນໃດສາມາດປະຕິບັດພາລະກິດທີ່ພຣະອົງປະຕິບັດ. ສິ່ງທີ່ພຣະອົງເຂົ້າໃຈ ມະນຸດແມ່ນບໍ່ມີທາງເຂົ້າໃຈ ແລະ ສຳລັບຄວາມຮູ້ຂອງພຣະອົງ ມະນຸດກໍບໍ່ຮູ້ວ່າມັນມາຈາກໃສ. ມີບາງຄົນທີ່ເວົ້າວ່າ "ຂ້ານ້ອຍກໍທຳມະດາຄືກັນກັບພຣະອົງເຊັ່ນກັນ, ແຕ່ເປັນໄປໄດ້ແນວໃດທີ່ຂ້ານ້ອຍບໍ່ຮູ້ຈັກສິ່ງທີ່ພຣະອົງຮູ້ຈັກ?" ຂ້ານ້ອຍເຖົ້າກວ່າ ແລະ ມີປະສົບການຫຼາຍກວ່າ, ແຕ່ພຣະອົງຮູ້ຈັກສິ່ງທີ່ຂ້ານ້ອຍບໍ່ຮູ້ໄດ້ແນວໃດ? ເທົ່າທີ່ມະນຸດເຂົ້າໃຈ ທຸກສິ່ງເຫຼົ່ານີ້ແມ່ນສິ່ງທີ່ມະນຸດບໍ່ມີທາງບັນລຸໄດ້. ແລ້ວກໍມີຄົນທີ່ເວົ້າວ່າ: "ບໍ່ມີໃຜຮູ້ຈັກພາລະກິດທີ່ປະຕິບັດໃນອິດສະຣາເອນ; ແລະ ແມ່ນແຕ່ຜູ້ອະທິບາຍພຣະຄຳພີກໍຍັງບໍ່ສາມາດອະທິບາຍໄດ້; ພຣະອົງຈະຮູ້ໄດ້ແນວໃດ?" ສິ່ງເຫຼົ່ານີ້ບໍ່ແມ່ນເລື່ອງທີ່ເໜືອທຳມະຊາດບໍ? ພຣະອົງບໍ່ໄດ້ມີປະສົບການເຖິງກັບການອັດສະຈັນ, ແຕ່ພຣະອົງກໍຮູ້ຈັກທຸກສິ່ງ; ພຣະອົງກ່າວ ແລະ ສະແດງຄວາມຈິງຢ່າງງ່າຍທີ່ສຸດ. ນີ້ບໍ່ແມ່ນສິ່ງທີ່ເໜືອທຳມະຊາດບໍ? ພາລະກິດຂອງພຣະອົງຢູ່ເໜືອສິ່ງທີ່ມະນຸດສາມາດບັນລຸໄດ້. ຄວາມຄິດຂອງມະນຸດຄົນໃດກໍຕາມທີ່ມີຮ່າງກາຍຂອງເນື້ອໜັງແມ່ນບໍ່ສາມາດບັນລຸໄດ້ ແລະ ເຫດຜົນທີ່ມາຈາກຄວາມຄິດຂອງມະນຸດກໍບໍ່ອາດຄິດໄດ້. ເຖິງແມ່ນພຣະອົງບໍ່ເຄີຍອ່ານພຣະຄຳພີ, ພຣະອົງກໍເຂົ້າໃຈພາລະກິດຂອງພຣະເຈົ້າໃນອິດສະຣາເອນ. ແລ້ວເຖິງແມ່ນພຣະອົງຢືນຢູ່ເທິງແຜ່ນດິນໂລກເມື່ອພຣະອົງກ່າວ, ພຣະອົງກໍກ່າວເຖິງຄວາມເລິກລັບຂອງສະຫວັນຊັ້ນສາມ. ເມື່ອມະນຸດອ່ານພຣະທຳເຫຼົ່ານັ້ນ, ຄວາມຮູ້ສຶກນີ້ກໍຈະເອົາຊະນະເຂົາ: "ສິ່ງນີ້ບໍ່ແມ່ນພາສາຂອງສະຫວັນຊັ້ນສາມບໍ?" ສິ່ງເຫຼົ່ານີ້ບໍ່ແມ່ນທຸກເລື່ອງທີ່ຢູ່ເໜືອສິ່ງທີ່ມະນຸດທຳມະດາສາມາດບັນລຸໄດ້ບໍ? ໃນເວລານັ້ນ ເມື່ອພຣະເຢຊູຜະເຊີນກັບສີ່ສິບມື້ແຫ່ງການອົດອາຫານ, ນີ້ບໍ່ແມ່ນສິ່ງທີ່ເໜືອທຳມະຊາດບໍ? ຖ້າເຈົ້າເວົ້າວ່າສີ່ສິບມື້ແຫ່ງການອົດອາຫານໃນທຸກກໍລະນີເປັນສິ່ງທີ່ເໜືອທຳມະຊາດ, ເຊັ່ນ ການກະທຳຂອງວິນຍານຊົ່ວຮ້າຍ, ແລ້ວເຈົ້າບໍ່ໄດ້ກ່າວຮ້າຍພຣະເຢຊູບໍ? ກ່ອນປະຕິບັດພັນທະກິດຂອງພຣະອົງ, ພຣະເຢຊູເປັນມະນຸດທຳມະດາ. ພຣະອົງກໍໄປໂຮງຮຽນ; ບໍ່ດັ່ງນັ້ນ ພຣະອົງຈະຮຽນອ່ານ ແລະ ຂຽນໄດ້ແນວໃດ? ເມື່ອພຣະເຈົ້າກາຍເປັນເນື້ອໜັງ, ພຣະວິນຍານກໍສະຖິດຢູ່ໃນເນື້ອໜັງ. ຢ່າງໃດກໍຕາມ,

ເມື່ອພຣະອົງເປັນມະນຸດທຳມະດາ ມັນກໍຈຳເປັນສຳລັບພຣະອົງທີ່ຈະຜ່ານຂະບວນການເຕີບໂຕ ແລະ ເປັນຜູ້ໃຫຍ່ ແລະ ຖ້າຄວາມສາມາດໃນການຮັບຮູ້ຂອງພຣະອົງຍັງບໍ່ໄດ້ເຖິງຂັ້ນເປັນຜູ້ໃຫຍ່ ແລະ ພຣະອົງຍັງບໍ່ສາມາດແຍກແຍະສິ່ງຕ່າງໆໄດ້ເທື່ອ, ພຣະອົງກໍຖືວ່າຍັງເປັນມະນຸດທຳມະດາ. ພຽງແຕ່ຫຼັງຈາກທີ່ຄວາມເປັນມະນຸດຂອງພຣະອົງໄດ້ເຕີບໃຫຍ່ ພຣະອົງຈຶ່ງສາມາດປະຕິບັດພັນທະກິດຂອງພຣະອົງໄດ້. ພຣະອົງຈະສາມາດປະຕິບັດພັນທະກິດຂອງພຣະອົງໃນຂະນະທີ່ຄວາມເປັນມະນຸດທຳມະດາຂອງພຣະອົງຍັງບໍ່ທັນບັນລຸສະພາວະຄວາມເປັນຜູ້ໃຫຍ່ ແລະ ການໃຫ້ເຫດຜົນຂອງພຣະອົງຍັງບໍ່ທັນໜັກແໜ້ນໄດ້ແນວໃດ? ແນ່ນອນ ພຣະອົງແມ່ນບໍ່ສາມາດຖືກຄາດຫວັງໃຫ້ປະຕິບັດພັນທະກິດຂອງພຣະອົງເມື່ອອາຍຸຫົກ ຫຼື ເຈັດປີ! ເປັນຫຍັງພຣະເຈົ້າຈຶ່ງບໍ່ສຳແດງພຣະອົງເອງຢ່າງເປີດເຜີຍເມື່ອພຣະອົງກາຍມາເປັນເນື້ອໜັງໃນຕອນທຳອິດ? ມັນເປັນຍ້ອນວ່າ ຄວາມເປັນມະນຸດຂອງເນື້ອໜັງຂອງພຣະອົງຍັງບໍ່ທັນບັນລຸສະພາວະຄວາມເປັນຜູ້ໃຫຍ່ເທື່ອ; ຂະບວນການຮັບຮູ້ຂອງເນື້ອໜັງຂອງພຣະອົງ ພ້ອມກັບຄວາມເປັນມະນຸດທຳມະດາຂອງເນື້ອໜັງນີ້ ຈຶ່ງບໍ່ໄດ້ຢູ່ໃນການຄອບຄອງຂອງພຣະອົງຢ່າງສົມບູນ. ຍ້ອນເຫດຜົນນີ້, ມັນຈຶ່ງຈຳເປັນທີ່ສຸດສຳລັບພຣະອົງທີ່ຈະມີຄວາມເປັນມະນຸດທຳມະດາ ແລະ ມີຄວາມສາມັນສຳນຶກຂອງມະນຸດທຳມະດາ ຈົນກວ່າພຣະອົງກຽມພ້ອມຢ່າງພຽງພໍທີ່ຈະຮັບເອົາພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງ ກ່ອນທີ່ພຣະອົງຈະສາມາດເລີ່ມຕົ້ນພາລະກິດຂອງພຣະອົງໄດ້. ຖ້າພຣະອົງບໍ່ພຽບພ້ອມສຳລັບໜ້າທີ່ນັ້ນ, ມັນກໍຈຳເປັນສຳລັບພຣະອົງທີ່ຈະສືບຕໍ່ເຕີບໂຕ ແລະ ເປັນຜູ້ໃຫຍ່. ຖ້າພຣະເຢຊູເລີ່ມຕົ້ນພາລະກິດຂອງພຣະອົງໃນຕອນອາຍຸເຈັດ ຫຼື ແປດປີ, ມະນຸດຈະບໍ່ຖືວ່າພຣະອົງເປັນຄົນອັດສະລິຍະບໍ? ມະນຸດທຸກຄົນຈະບໍ່ຄິດວ່າພຣະອົງເປັນເດັກນ້ອຍບໍ? ຜູ້ໃດຈະຄິດວ່າພຣະອົງເປັນຕາເຊື່ອຖືໄດ້? ເດັກນ້ອຍອາຍຸເຈັດ ຫຼື ແປດປີທີ່ຕໍ່າກວ່າແທ່ນທີ່ຢູ່ຕໍ່ໜ້າພຣະອົງ, ພຣະອົງເໝາະສົມທີ່ຈະເທດສະໜາຢູ່ບໍ? ກ່ອນທີ່ຄວາມເປັນມະນຸດທຳມະດາຂອງພຣະອົງໄດ້ກາຍມາເປັນຜູ້ໃຫຍ່, ພຣະອົງບໍ່ໄດ້ເໝາະສົມສຳລັບໜ້າທີ່ນັ້ນ. ເວົ້າໄດ້ວ່າ ຖ້າຄວາມເປັນມະນຸດຂອງພຣະອົງຍັງບໍ່ໄດ້ບັນລຸວຸດທິພາວະເທື່ອ, ພາລະກິດຫຼາຍພາກສ່ວນກໍຈະບໍ່ສາມາດຖືກບັນລຸຜົນໄດ້. ພາລະກິດຂອງພຣະວິນຍານຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງແມ່ນຖືກຄວບຄຸມດ້ວຍຫຼັກການຂອງມັນເອງເຊັ່ນກັນ. ມີແຕ່ເມື່ອພຣະອົງປະກອບມີຄວາມເປັນມະນຸດທຳມະດາ ພຣະອົງຈຶ່ງສາມາດຮັບພາລະກິດ ແລະ ຮັບເອົາການມອບໝາຍຂອງພຣະບິດາໄດ້. ແລ້ວເມື່ອນັ້ນ ພຣະອົງຈຶ່ງເລີ່ມຕົ້ນພາລະກິດຂອງພຣະອົງໄດ້. ໃນໄລຍະທີ່ພຣະອົງເປັນເດັກນ້ອຍຢູ່ນັ້ນ, ພຣະເຢຊູແມ່ນບໍ່ສາມາດເຂົ້າໃຈຫຍັງຫຼາຍກ່ຽວກັບສິ່ງທີ່ເກີດຂຶ້ນໃນຍຸກບູຮານ ແລະ ພຽງແຕ່ຜ່ານການຖາມອາຈານໃນທຳມະສາລາ ພຣະອົງຈຶ່ງເຂົ້າໃຈໄດ້. ຖ້າພຣະອົງເລີ່ມຕົ້ນພາລະກິດຂອງພຣະອົງທັນທີທີ່ພຣະອົງຮຽນເວົ້າ, ມັນຈະເປັນໄປໄດ້ບໍທີ່ພຣະອົງຈະບໍ່ສ້າງຄວາມຜິດພາດ? ພຣະເຈົ້າຈະສາມາດເຮັດຜິດໄດ້ແນວໃດ? ສະນັ້ນ ພຽງແຕ່ຫຼັງຈາກທີ່ພຣະອົງສາມາດປະຕິບັດພາລະກິດເທົ່ານັ້ນ ພຣະອົງຈຶ່ງເລີ່ມຕົ້ນພາລະກິດຂອງພຣະອົງ; ພຣະອົງບໍ່ໄດ້ປະຕິບັດພາລະກິດໃດໆ ຈົນກວ່າພຣະອົງສາມາດຮັບພາລະກິດນັ້ນໄດ້ຢ່າງສົມບູນ. ເມື່ອອາຍຸ 29 ປີ, ພຣະເຢຊູເປັນຜູ້ໃຫຍ່ແລ້ວພໍສົມຄວນ ແລະ ຄວາມເປັນມະນຸດຂອງພຣະອົງກໍພຽງພໍທີ່ຈະຮັບເອົາພາລະກິດທີ່

ພຣະອົງຕ້ອງປະຕິບັດ. ມີແຕ່ເມື່ອນັ້ນ ພຣະວິນຍານຂອງພຣະເຈົ້າຈຶ່ງໄດ້ເລີ່ມຕົ້ນປະຕິບັດພາລະກິດໃນພຣະອົງຢ່າງເປັນທາງການ. ໃນເວລານັ້ນ, ໂຢຮັນໄດ້ຈັດກຽມເປັນເວລາເຈັດປີເພື່ອເປີດຫົນທາງໃຫ້ກັບພຣະອົງ ແລະ ເມື່ອສຳເລັດພາລະກິດຂອງເພິ່ນແລ້ວ, ເພິ່ນກໍຖືກໂຍນເຂົ້າຄຸກ. ຫຼັງຈາກນັ້ນ ພາລະທັງໝົດກໍຕົກຢູ່ກັບພຣະເຢຊູ. ຖ້າພຣະອົງຮັບເອົາພາລະກິດນີ້ຕອນອາຍຸ 21 ຫຼື 22 ປີ, ໃນຕອນທີ່ຄວາມເປັນມະນຸດຂອງພຣະອົງຍັງຂາດເຂີນຢູ່, ໃນຕອນທີ່ພຣະອົງຫາກໍ່ເຂົ້າສູ່ຊ່ວງໄວໜຸ່ມໃໝ່ໆ ແລະ ມີຫຼາຍສິ່ງທີ່ພຣະອົງຍັງບໍ່ເຂົ້າໃຈ, ແລ້ວພຣະອົງກໍຈະບໍ່ສາມາດຄວບຄຸມໄດ້. ໃນເວລານັ້ນ, ໂຢຮັນໄດ້ປະຕິບັດພາລະກິດຂອງເພິ່ນໃນໄລຍະໜຶ່ງແລ້ວກ່ອນທີ່ພຣະເຢຊູຈະເລີ່ມຕົ້ນພາລະກິດຂອງພຣະອົງ ເຊິ່ງເປັນເວລາທີ່ພຣະອົງຢູ່ໃນໄວກາງຄົນແລ້ວ. ໃນຕອນອາຍຸສໍ່ານັ້ນ, ຄວາມເປັນມະນຸດທຳມະດາຂອງພຣະອົງກໍພຽງພໍທີ່ຈະຮັບພາລະກິດທີ່ພຣະອົງຄວນປະຕິບັດ. ບັດນີ້ ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນມີຄວາມເປັນມະນຸດທຳມະດາ ແລະ ເຖິງແມ່ນວ່າພຣະອົງອາດຈະຫ່າງໄກຈາກຄວາມເປັນຜູ້ໃຫຍ່ເມື່ອທຽບກັບຜູ້ອາວຸໂສກວ່າໃນບັນດາພວກເຈົ້າ, ແຕ່ຄວາມເປັນມະນຸດດັ່ງກ່າວນີ້ແມ່ນພຽງພໍແຕ່ສໍ່ານີ້ແລ້ວທີ່ຈະຮັບເອົາພາລະກິດຂອງພຣະອົງ. ສະຖານະການອ້ອມຂ້າງພາລະກິດໃນປັດຈຸບັນແມ່ນບໍ່ຄືກັບສະຖານະການທີ່ຢູ່ໃນຍຸກຂອງພຣະເຢຊູທັງໝົດ. ເປັນຫຍັງພຣະເຢຊູຈຶ່ງເລືອກອັກຄະສາວົກສິບສອງຄົນ? ມັນແມ່ນເພື່ອສະໜັບສະໜູນພາລະກິດຂອງພຣະອົງ ແລະ ສອດຄ່ອງກັບພາລະກິດນັ້ນ. ໃນດ້ານໜຶ່ງ ແມ່ນເພື່ອວາງພື້ນຖານສຳລັບພາລະກິດຂອງພຣະອົງໃນເວລານັ້ນ, ໃນຂະນະດຽວກັນ ອີກດ້ານໜຶ່ງ ກໍຍັງເປັນການວາງພື້ນຖານສຳລັບພາລະກິດຂອງພຣະອົງໃນມື້ຕໍ່ມາ. ມັນແມ່ນຄວາມປະສົງຂອງພຣະເຢຊູທີ່ເລືອກເອົາອັກຄະສາວົກສິບສອງຄົນ ເພາະວ່າ ນັ້ນຄືຄວາມປະສົງຂອງພຣະເຈົ້າເອງ ແລະ ເພື່ອໃຫ້ສອດຄ່ອງກັບພາລະກິດໃນເວລານັ້ນ. ພຣະອົງເຊື່ອວ່າພຣະອົງຄວນເລືອກເອົາອັກຄະສາວົກສິບສອງຄົນ ແລະ ຫຼັງຈາກນັ້ນກໍນຳພາພວກເຂົາເທດສະໜາໃນທຸກຫົນແຫ່ງ. ແຕ່ໃນປັດຈຸບັນນີ້ ບໍ່ຈຳເປັນຕ້ອງມີສິ່ງນີ້ໃນທ່າມກາງພວກເຈົ້າ! ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດພາລະກິດໃນເນື້ອໜັງ, ມີຫຼາຍຫຼັກການ ແລະ ມີຫຼາຍເລື່ອງທີ່ມະນຸດແມ່ນບໍ່ເຂົ້າໃຈ; ມະນຸດໃຊ້ແນວຄິດຂອງເຂົາເອງເພື່ອວັດແທກພາລະກິດຂອງພຣະອົງຢູ່ເລື້ອຍໆ ຫຼື ເພື່ອຮຽກຮ້ອງຫຼາຍເກີນໄປຈາກພຣະເຈົ້າ. ແຕ່ຈົນເຖິງປັດຈຸບັນນີ້, ຫຼາຍຄົນກໍຍັງບໍ່ຮູ້ເລີຍວ່າ ຄວາມຮູ້ຂອງພວກເຂົາແມ່ນພຽງປະກອບດ້ວຍແນວຄິດຂອງພວກເຂົາເອງເທົ່ານັ້ນ. ບໍ່ວ່າພຣະເຈົ້າຈະບັງເກີດເປັນມະນຸດໃນຍຸກໃດ ຫຼື ສະຖານທີ່ໃດກໍຕາມ, ຫຼັກການສຳລັບພາລະກິດຂອງພຣະອົງໃນເນື້ອໜັງກໍຍັງບໍ່ປ່ຽນແປງ. ພຣະອົງບໍ່ສາມາດກາຍເປັນເນື້ອໜັງ ແລະ ຢູ່ເໜືອເນື້ອໜັງໃນການປະຕິບັດພາລະກິດຂອງພຣະອົງ; ແຮງໄກທີ່ພຣະອົງຈະກາຍເປັນເນື້ອໜັງ ແລະ ບໍ່ປະຕິບັດພາລະກິດພາຍໃນຄວາມເປັນມະນຸດທຳມະດາຂອງເນື້ອໜັງ. ຖ້າເປັນດັ່ງນັ້ນ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າກໍຈະສູນເປົ່າ ແລະ ພຣະທຳທີ່ກາຍເປັນເນື້ອໜັງກໍຈະບໍ່ມີຄວາມໝາຍຫຍັງເລີຍ. ຍິ່ງໄປກວ່ານັ້ນ ມີພຽງແຕ່ພຣະບິດາທີ່ຢູ່ສະຫວັນເທົ່ານັ້ນ (ພຣະວິນຍານ) ທີ່ຮູ້ຈັກການບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ບໍ່ມີຄົນໃດອີກເລີຍທີ່ຮູ້ຈັກ, ບໍ່ມີແມ່ນແຕ່ເນື້ອໜັງຂອງພຣະອົງເອງ ຫຼື ຜູ້ສົ່ງຂ່າວຈາກສະຫວັນ. ເມື່ອເປັນດັ່ງນີ້ ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງກໍ

ເປັນທຳມະດາຫຼາຍຂຶ້ນ ແລະ ສາມາດສະແດງໃຫ້ເຫັນວ່າ ພຣະທຳໄດ້ກາຍມາເປັນເນື້ອໜັງແທ້ຈິງ ແລະ ເນື້ອໜັງກໍໝາຍເຖິງມະນຸດທຳມະດາ ແລະ ປົກກະຕິ.

ບາງຄົນສົງໄສວ່າ "ເປັນຫຍັງຕ້ອງເປັນພຣະເຈົ້າເອງທີ່ເລີ່ມຕົ້ນຍຸກໃດໜຶ່ງ? ສິ່ງທີ່ຖືກສ້າງບໍ່ສາມາດເຮັດແທນພຣະອົງໄດ້ບໍ?" ພວກເຈົ້າທຸກຄົນຮູ້ວ່າ ພຣະເຈົ້າກາຍເປັນເນື້ອໜັງຍ້ອນຈຸດປະສົງຢ່າງຈະແຈ້ງໃນການລິເລີ່ມຍຸກໃໝ່ໂດຍສະເພາະ ແລະ ແນ່ນອນ ເມື່ອພຣະອົງລິເລີ່ມຍຸກໃໝ່ ພຣະອົງຈະເຮັດໃຫ້ຍຸກຜ່ານມາສຳເລັດໃນເວລາດຽວກັນ. ພຣະເຈົ້າຄືການເລີ່ມຕົ້ນ ແລະ ການສິ້ນສຸດ; ພຣະອົງເອງເປັນຜູ້ລິເລີ່ມພາລະກິດຂອງພຣະອົງ ແລະ ດ້ວຍເຫດນັ້ນ ກໍຕ້ອງເປັນພຣະອົງເອງທີ່ເຮັດໃຫ້ຍຸກຜ່ານມາສິ້ນສຸດລົງ. ນັ້ນແມ່ນການພິສູດວ່າ ພຣະອົງເຮັດໃຫ້ຊາຕານພ່າຍແພ້ ແລະ ເອົາຊະນະໂລກ. ແຕ່ລະຄັ້ງທີ່ພຣະອົງເອງປະຕິບັດພາລະກິດທ່າມກາງມະນຸດ, ມັນແມ່ນເປັນຈຸດເລີ່ມຕົ້ນຂອງການຕໍ່ສູ້ໃໝ່. ຫາກປາສະຈາກການເລີ່ມຕົ້ນຂອງພາລະກິດໃໝ່, ມັນກໍຈະບໍ່ມີການເຮັດໃຫ້ພາລະກິດເກົ່າສຳເລັດລົງໂດຍທຳມະຊາດ. ແລ້ວເມື່ອບໍ່ມີການເຮັດໃຫ້ພາລະກິດເກົ່າສຳເລັດລົງ, ສິ່ງນີ້ແມ່ນເປັນການພິສູດວ່າ ການຕໍ່ສູ້ກັບຊາຕານຍັງບໍ່ໄດ້ມາເຖິງຕອນຈົບເທື່ອ. ພຽງແຕ່ເມື່ອພຣະເຈົ້າເອງລົງມາ ແລະ ປະຕິບັດພາລະກິດໃໝ່ທ່າມກາງມະນຸດ, ມະນຸດຈຶ່ງຈະສາມາດລອດພົ້ນຈາກອຳນາດຂອງຊາຕານຢ່າງສົມບູນ ແລະ ຮັບເອົາຊີວິດໃໝ່ ແລະ ການເລີ່ມຕົ້ນໃໝ່. ບໍ່ດັ່ງນັ້ນ ມະນຸດຈະດຳລົງຊີວິດຢູ່ໃນຍຸກເກົ່າຕະຫຼອດໄປ ແລະ ດຳລົງຊີວິດຢູ່ພາຍໃຕ້ອິດທິພົນເດີມຂອງຊາຕານຕະຫຼອດໄປ. ເມື່ອທຸກຍຸກຖືກນຳພາໂດຍພຣະເຈົ້າ, ສ່ວນໜຶ່ງຂອງມະນຸດກໍຖືກເຮັດໃຫ້ລອດພົ້ນ ແລະ ສະນັ້ນ ມະນຸດຈຶ່ງກ້າວໜ້າໄປສູ່ຍຸກໃໝ່ພ້ອມກັບພາລະກິດຂອງພຣະເຈົ້າ. ໄຊຊະນະຂອງພຣະເຈົ້າໝາຍເຖິງໄຊຊະນະສຳລັບທຸກຄົນທີ່ຕິດຕາມພຣະອົງ. ຖ້າຊົນຊາດຂອງມະນຸດທີ່ຖືກສ້າງໄດ້ຖືກມອບໝາຍໃຫ້ຮັບຜິດຊອບໃນການສິ້ນສຸດຍຸກດັ່ງກ່າວ, ແລ້ວບໍ່ວ່າມັນຈະມາຈາກມຸມມອງຂອງມະນຸດ ຫຼື ຂອງຊາຕານ, ສິ່ງນີ້ກໍຈະເປັນພຽງການກະທຳທີ່ຕໍ່ຕ້ານ ຫຼື ກະບົດຕໍ່ພຣະເຈົ້າ, ບໍ່ໄດ້ເປັນຄວາມເຊື່ອຟັງພຣະເຈົ້າແມ່ນແຕ່ໜ້ອຍດຽວ ແລະ ພາລະກິດຂອງມະນຸດກໍຈະເປັນເຄື່ອງມືສຳລັບຊາຕານ. ພຽງແຕ່ຖ້າມະນຸດເຊື່ອຟັງ ແລະ ຕິດຕາມພຣະເຈົ້າໃນຍຸກທີ່ພຣະເຈົ້າເອງໄດ້ລິເລີ່ມເທົ່ານັ້ນ ຊາຕານຈຶ່ງຈະຕາຍໃຈຢ່າງສົມບູນ ຍ້ອນນັ້ນຄືໜ້າທີ່ຂອງສິ່ງຖືກສ້າງ. ແລ້ວດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ພວກເຈົ້າພຽງແຕ່ຕ້ອງຕິດຕາມ ແລະ ເຊື່ອຟັງ ແລະ ບໍ່ໄດ້ມີການຮຽກຮ້ອງຫຍັງເພີ່ມເຕີມຈາກພວກເຈົ້າ. ນີ້ແມ່ນຄວາມໝາຍຂອງການທີ່ແຕ່ລະຄົນຮັກສາໜ້າທີ່ຂອງເຂົາ ແລະ ແຕ່ລະຄົນປະຕິບັດໜ້າທີ່ຂອງໃຜລາວ. ພຣະເຈົ້າປະຕິບັດພາລະກິດຂອງພຣະອົງເອງ ແລະ ບໍ່ຈຳເປັນຕ້ອງໃຫ້ມະນຸດປະຕິບັດແທນພຣະອົງ ຫຼື ພຣະອົງບໍ່ເຂົ້າຮ່ວມໃນພາລະກິດຂອງສິ່ງຖືກສ້າງ. ມະນຸດປະຕິບັດໜ້າທີ່ຂອງເຂົາເອງ ແລະ ບໍ່ເຂົ້າຮ່ວມໃນພາລະກິດຂອງພຣະເຈົ້າ. ມີພຽງແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນຄວາມເຊື່ອຟັງ ແລະ ການພິສູດຄວາມປະລາໄຊຂອງຊາຕານ. ຫຼັງຈາກທີ່ພຣະເຈົ້າເອງໄດ້ສຳເລັດໃນການລິເລີ່ມຍຸກໃໝ່, ພຣະອົງກໍບໍ່ລົງມາເພື່ອປະຕິບັດພາລະກິດທ່າມກາງມະນຸດຊາດດ້ວຍຕົວພຣະອົງເອງອີກຕໍ່ໄປ. ພຽງແຕ່ເມື່ອນັ້ນ ມະນຸດຈຶ່ງຈະກ້າວເຂົ້າສູ່ຍຸກໃໝ່ຢ່າງເປັນທາງການເພື່ອປະຕິບັດໜ້າທີ່ຂອງເຂົາ ແລະ ປະຕິບັດພາລະກິດຂອງເຂົາໃນຖານະທີ່ເປັນສິ່ງຖືກສ້າງ.

ສິ່ງເຫຼົ່ານີ້ແມ່ນຫຼັກການທີ່ປົກຄອງພາລະກິດ ເຊິ່ງບໍ່ມີໃຜສາມາດຝ່າຝືນໄດ້. ມີແຕ່ການປະຕິບັດພາລະກິດໃນລັກສະນະນີ້ເທົ່ານັ້ນຈຶ່ງເໝາະສົມ ແລະ ສົມເຫດສົມຜົນ. ພາລະກິດຂອງພຣະເຈົ້າແມ່ນຕ້ອງຖືກປະຕິບັດໂດຍພຣະເຈົ້າເອງ. ພຣະອົງເປັນຜູ້ລິເລີ່ມພາລະກິດຂອງພຣະອົງ ແລະ ພຣະອົງເປັນຜູ້ເຮັດໃຫ້ພາລະກິດຂອງພຣະອົງສຳເລັດລົງ. ພຣະອົງເປັນຜູ້ວາງແຜນພາລະກິດ ແລະ ພຣະອົງເປັນຜູ້ຄຸ້ມຄອງພາລະກິດນັ້ນ ແລະ ຍິ່ງໄປກວ່ານັ້ນກໍເປັນພຣະອົງເອງທີ່ເຮັດໃຫ້ພາລະກິດນັ້ນບັນລຸຜົນ. ດັ່ງທີ່ໄດ້ກ່າວໄວ້ໃນພຣະຄຳພີ "ເຮົາຄືການເລີ່ມຕົ້ນ ແລະ ການສິ້ນສຸດ; ເຮົາເປັນຜູ້ຫວ່ານ ແລະ ຜູ້ກ່ຽວ". ທຸກສິ່ງທີ່ກ່ຽວຂ້ອງກັບພາລະກິດແຫ່ງການຄຸ້ມຄອງແມ່ນຖືກປະຕິບັດໂດຍພຣະເຈົ້າເອງ. ພຣະອົງເປັນຜູ້ປົກຄອງແຜນການຄຸ້ມຄອງຫົກພັນປີ; ບໍ່ມີໃຜສາມາດປະຕິບັດພາລະກິດຂອງພຣະອົງແທນພຣະອົງໄດ້ ແລະ ບໍ່ມີໃຜສາມາດນຳພາລະກິດຂອງພຣະອົງໄປສູ່ຕອນຈົບໄດ້ ຍ້ອນວ່າ ພຣະອົງເປັນຜູ້ຖືທຸກສິ່ງຢູ່ໃນມືຂອງພຣະອົງ. ເມື່ອພຣະອົງສ້າງແຜ່ນດິນໂລກ, ພຣະອົງກໍຈະນຳພາໂລກທັງປວງໃຫ້ດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະອົງ ແລະ ພຣະອົງກໍຈະເຮັດໃຫ້ຍຸກທັງໝົດສິ້ນສຸດລົງເຊັ່ນກັນ ແລ້ວກໍເຮັດໃຫ້ແຜນການທັງໝົດຂອງພຣະອົງບັນລຸຜົນ!

# ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (2)

ໃນເວລານັ້ນ ພຣະເຢຊູປະຕິບັດພາລະກິດໃນຢູດາຍ, ພຣະອົງກໍປະຕິບັດຢ່າງເປີດເຜີຍ, ແຕ່ໃນປັດຈຸບັນນີ້, ເຮົາປະຕິບັດພາລະກິດ ແລະ ກ່າວທ່າມກາງພວກເຈົ້າຢ່າງລັບໆ. ຄົນທີ່ບໍ່ເຊື່ອແມ່ນບໍ່ຮູ້ຈັກເຖິງສິ່ງນີ້ເລີຍ. ພາລະກິດຂອງເຮົາທີ່ຢູ່ທ່າມກາງພວກເຈົ້າແມ່ນປິດລັບຕໍ່ຄົນທີ່ຢູ່ຂ້າງນອກ. ພຣະທຳເຫຼົ່ານີ້, ການຂ້ຽນຕີ ແລະ ການພິພາກສາເຫຼົ່ານີ້ແມ່ນເປັນທີ່ຮູ້ຈັກຕໍ່ພວກເຈົ້າເທົ່ານັ້ນ ແລະ ບໍ່ແມ່ນຄົນອື່ນ. ທັງໝົດຂອງພາລະກິດນີ້ແມ່ນຖືກປະຕິບັດໃນທ່າມກາງພວກເຈົ້າ ແລະ ເປີດເຜີຍໃຫ້ກັບພວກເຈົ້າເທົ່ານັ້ນ; ບໍ່ມີໃຜທ່າມກາງຄົນບໍ່ເຊື່ອທີ່ຮູ້ຈັກເຖິງສິ່ງນີ້, ຍ້ອນເວລານັ້ນຍັງບໍ່ທັນມາເຖິງ. ຜູ້ຄົນເຫຼົ່ານີ້ທີ່ຢູ່ໃນນີ້ແມ່ນໃກ້ຖືກເຮັດໃຫ້ສົມບູນແລ້ວຫຼັງຈາກທີ່ໄດ້ອົດກັ້ນກັບການຂ້ຽນຕີ, ແຕ່ຄົນທີ່ຢູ່ຂ້າງນອກບໍ່ຮູ້ຈັກຫຍັງກ່ຽວກັບເລື່ອງນີ້ເທື່ອ. ພາລະກິດນີ້ແມ່ນລີ້ລັບຫຼາຍເກີນໄປ! ສຳລັບພວກເຂົາແລ້ວ, ພຣະເຈົ້າທີ່ກາຍມາເປັນເນື້ອໜັງແມ່ນລີ້ລັບ, ແຕ່ສຳລັບຄົນທີ່ຢູ່ໃນກະແສນີ້, ສາມາດເວົ້າໄດ້ວ່າພຣະອົງເປີດເຜີຍ. ເຖິງແມ່ນວ່າ ສຳລັບພຣະເຈົ້າ ທຸກສິ່ງໄດ້ເປີດອອກ, ທຸກສິ່ງຖືກເປີດເຜີຍ ແລະ ທຸກສິ່ງຖືກເຮັດໃຫ້ເປັນອິດສະຫຼະ, ສິ່ງນີ້ແມ່ນເປັນຈິງສຳລັບຄົນທີ່ເຊື່ອໃນພຣະອົງເທົ່ານັ້ນ; ສຳລັບຄົນອື່ນທີ່ເປັນຄົນບໍ່ເຊື່ອແລ້ວ, ບໍ່ມີຫຍັງໃຫ້ຮູ້ຈັກ. ພາລະກິດທີ່ກຳລັງຖືກປະຕິບັດໃຫ້ສຳເລັດທ່າມກາງເຈົ້າ ແລະ ໃນປະເທດຈີນໃນປັດຈຸບັນ ແມ່ນຖືກປົກປິດຢ່າງເຄັ່ງຄັດເພື່ອບໍ່ໃຫ້ພວກເຂົາຮູ້. ຖ້າພວກເຂົາຮູ້ຈັກເຖິງພາລະກິດນີ້, ແລ້ວສິ່ງທີ່ພວກເຂົາຈະເຮັດກໍມີແຕ່ກ່າວໂທດພາລະກິດນັ້ນ ແລະ ເຮັດໃຫ້ພາລະກິດນັ້ນຕົກຢູ່ໃນການຂົ່ມເຫັງ. ພວກເຂົາຈະບໍ່ເຊື່ອໃນພາລະກິດນັ້ນ. ການປະຕິບັດພາລະກິດໃນຊົນຊາດຂອງມັງກອນແດງໃຫຍ່ ເຊິ່ງເປັນສະຖານທີ່ຫຼ້າຫຼັງທີ່ສຸດ ກໍບໍ່ແມ່ນໜ້າວຽກທີ່ງ່າຍດາຍ. ຖ້າພາລະກິດນີ້ຕ້ອງຖືກປະຕິບັດໃນທີ່ເປີດເຜີຍ, ມັນກໍຈະສືບຕໍ່ໄປໄດ້ຍາກ. ຂັ້ນຕອນນີ້ຂອງພາລະກິດບໍ່ສາມາດຖືກປະຕິບັດໃນສະຖານທີ່ນີ້ໄດ້ຢ່າງແທ້ຈິງ. ຖ້າພາລະກິດນີ້ຕ້ອງຖືກປະຕິບັດໃນທີ່ເປີດເຜີຍ, ພວກເຂົາຈະຍອມໃຫ້ພາລະກິດນີ້ດຳເນີນໄປຂ້າງໜ້າໄດ້ແນວໃດ? ສິ່ງນີ້ຈະຍິ່ງບໍ່ເຮັດໃຫ້ພາລະກິດຢູ່ພາຍໃຕ້ຄວາມສ່ຽງຫຼາຍຂຶ້ນບໍ? ຖ້າພາລະກິດນີ້ບໍ່ຖືກປົກປິດ, ແຕ່ກົງກັນຂ້າມ ມັນຖືກປະຕິບັດຄືດັ່ງໃນເວລາຂອງພຣະເຢຊູ, ເມື່ອພຣະອົງຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍຢ່າງໜ້າປະທັບໃຈ, ແລ້ວພາລະກິດນັ້ນຈະບໍ່ໄດ້ຖືກ "ຍຶດຄອງ" ໂດຍມານຮ້າຍຕັ້ງແຕ່ດົນແລ້ວບໍ? ພວກເຂົາຈະສາມາດອົດກັ້ນຕໍ່ການເປັນຢູ່ຂອງພຣະເຈົ້າໄດ້ບໍ? ບັດນີ້ ຖ້າເຮົາເຂົ້າສູ່ໂຮງທຳເພື່ອເທດສະໜາ ແລະ ສັ່ງສອນມະນຸດ, ແລ້ວເຮົາຈະບໍ່ໄດ້ຖືກທຸບຫົວໃຫ້ແຕກແຕ່ດົນແລ້ວບໍ? ແລ້ວຖ້າສິ່ງນີ້ເກີດຂຶ້ນ, ພາລະກິດຂອງເຮົາຈະສືບຕໍ່ປະຕິບັດໄດ້ແນວໃດ? ເຫດຜົນທີ່ບໍ່ມີໝາຍສຳຄັນ ແລະ ການອັດສະຈັນຖືກສະແດງອອກຢ່າງເປີດເຜີຍນັ້ນ ກໍເພາະເຫັນແກ່ການປົກປິດ. ສະນັ້ນ ສຳລັບຄົນທີ່ບໍ່ເຊື່ອແລ້ວ ພາລະກິດຂອງເຮົາບໍ່ສາມາດເຫັນໄດ້, ຮູ້ຈັກໄດ້ ຫຼື ຄົ້ນພົບໄດ້. ຖ້າຂັ້ນຕອນນີ້ຂອງພາລະກິດຕ້ອງຖືກປະຕິບັດໃນລັກສະນະດຽວກັນກັບພຣະເຢຊູໃນຍຸກແຫ່ງພຣະຄຸນ, ມັນກໍບໍ່ສາມາດໝັ້ນຄົງໄດ້ສໍ່າກັບທີ່ມັນເປັນໃນຕອນນີ້. ສະນັ້ນ ການປະຕິບັດພາລະກິດຢ່າງລັບໆໃນລັກສະນະນີ້ແມ່ນເປັນປະໂຫຍດແກ່ພວກເຈົ້າ ແລະ ແກ່

ພາລະກິດໂດຍລວມ. ເມື່ອພາລະກິດຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນມາເຖິງຈຸດຈົບ ນັ້ນກໍຄື ເມື່ອພາລະກິດລັບນີ້ສິ້ນສຸດລົງ, ຂັ້ນຕອນນີ້ຂອງພາລະກິດກໍຈະເຜີຍອອກມາສູ່ສາທາລະນະ. ທຸກຄົນຈະຮູ້ຈັກວ່າມີກຸ່ມຂອງຜູ້ຊະນະໃນປະເທດຈີນ; ທຸກຄົນຈະຮູ້ຈັກວ່າພຣະເຈົ້າທີ່ກາຍເປັນເນື້ອໜັງໄດ້ຢູ່ໃນປະເທດຈີນ ແລະ ພາລະກິດຂອງພຣະອົງກໍໄດ້ມາເຖິງຈຸດສຸດທ້າຍ. ເມື່ອນັ້ນ ມັນຈະເຮັດໃຫ້ມະນຸດຮູ້ແຈ້ງວ່າ ເປັນຫຍັງປະເທດຈີນຈຶ່ງຍັງບໍ່ທັນສະແດງເຖິງຄວາມຕົກຕໍ່າ ຫຼື ການລົ້ມສະຫຼາຍເທື່ອ? ນັ້ນກໍຍ້ອນວ່າ ພຣະເຈົ້າກຳລັງປະຕິບັດພາລະກິດຂອງພຣະອົງໃນປະເທດຈີນເປັນການສ່ວນຕົວ ແລະ ໄດ້ເຮັດໃຫ້ກຸ່ມຄົນສົມບູນກາຍເປັນຜູ້ຊະນະ.

ພຣະເຈົ້າທີ່ກາຍມາເປັນເນື້ອໜັງພຽງແຕ່ສະແດງຕົວພຣະອົງເອງຕໍ່ຄົນບາງສ່ວນທີ່ຕິດຕາມພຣະອົງໃນລະຫວ່າງເວລາທີ່ພຣະອົງປະຕິບັດພາລະກິດຂອງພຣະອົງເປັນການສ່ວນຕົວເທົ່ານັ້ນ ແລະບໍ່ໄດ້ສະແດງຕົວຕໍ່ສິ່ງຖືກສ້າງທັງໝົດ. ພຣະອົງກາຍມາເປັນເນື້ອໜັງພຽງແຕ່ເພື່ອເຮັດໃຫ້ຂັ້ນຕອນໜຶ່ງຂອງພາລະກິດຂອງພຣະອົງສຳເລັດລົງ ແລະ ບໍ່ແມ່ນເພື່ອສະແດງໃຫ້ມະນຸດເຫັນເຖິງລັກສະນະຂອງພຣະອົງ. ເຖິງຢ່າງໃດກໍຕາມ ພາລະກິດຂອງພຣະອົງຕ້ອງຖືກປະຕິບັດດ້ວຍຕົວພຣະອົງເອງ, ສະນັ້ນມັນຈຶ່ງຈຳເປັນທີ່ພຣະອົງຈະປະຕິບັດໃນເນື້ອໜັງ. ເມື່ອພາລະກິດນີ້ສິ້ນສຸດລົງ, ພຣະອົງກໍຈະຈາກໂລກມະນຸດໄປ; ພຣະອົງບໍ່ສາມາດຄົງຢູ່ເປັນໄລຍະເວລາຍາວນານໃນທ່າມກາງມະນຸດຊາດ ເພາະຢ້ານຢືນຂວາງທາງພາລະກິດທີ່ຈະມາເຖິງ. ສິ່ງທີ່ພຣະອົງສະແດງອອກໃຫ້ກັບປວງຊົນກໍເປັນພຽງອຸປະນິໄສທີ່ຊອບທຳຂອງພຣະອົງ ແລະ ການກະທຳທຸກຢ່າງຂອງພຣະອົງ ແລະ ບໍ່ແມ່ນລັກສະນະ ເມື່ອພຣະອົງກາຍມາເປັນເນື້ອໜັງຄັ້ງທີ່ສອງ, ຍ້ອນລັກສະນະຂອງພຣະເຈົ້າພຽງແຕ່ສາມາດເຫັນໄດ້ຜ່ານອຸປະນິໄສຂອງພຣະອົງ ແລະ ບໍ່ສາມາດແທນໄດ້ໂດຍລັກສະນະຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງ. ລັກສະນະຂອງເນື້ອໜັງຂອງພຣະອົງແມ່ນຖືກເປີດເຜີຍໃຫ້ກັບຈຳນວນຄົນທີ່ຈຳກັດ ແລະ ໃຫ້ກັບຄົນທີ່ຕິດຕາມພຣະອົງເມື່ອພຣະອົງປະຕິບັດພາລະກິດໃນເນື້ອໜັງເທົ່ານັ້ນ. ນີ້ຄືເຫດຜົນທີ່ວ່າເປັນຫຍັງພາລະກິດທີ່ຖືກປະຕິບັດໃນຕອນນີ້ຈຶ່ງຖືກປະຕິບັດຢ່າງລັບໆ. ໃນລັກສະນະດຽວກັນ, ພຣະເຢຊູກໍພຽງແຕ່ສະແດງຕົວພຣະອົງເອງໃຫ້ກັບຊາວຢິວເມື່ອພຣະອົງປະຕິບັດພາລະກິດຂອງພຣະອົງ ແລະ ພຣະອົງບໍ່ໄດ້ສະແດງຕົວພຣະອົງເອງຢ່າງເປີດເຜີຍຕໍ່ບັນດາປະເທດຊາດອື່ນໆ. ສະນັ້ນ ຫຼັງຈາກທີ່ພຣະອົງໄດ້ເຮັດໃຫ້ພາລະກິດຂອງພຣະອົງສຳເລັດລົງ, ພຣະອົງກໍຈາກໂລກມະນຸດໄປທັນທີ ແລະ ບໍ່ໄດ້ຢູ່ຕໍ່; ຫຼັງຈາກນັ້ນຈຶ່ງບໍ່ແມ່ນພຣະອົງ ທີ່ມີຮູບລັກສະນະຂອງມະນຸດສະແດງຕົວພຣະອົງຕໍ່ມະນຸດ, ແຕ່ເປັນພຣະວິນຍານບໍລິສຸດທີ່ປະຕິບັດພາລະກິດໂດຍກົງ. ຫຼັງຈາກທີ່ພາລະກິດຂອງພຣະເຈົ້າທີ່ກາຍມາເປັນເນື້ອໜັງຖືກເຮັດໃຫ້ສຳເລັດຢ່າງສົມບູນແລ້ວ, ພຣະອົງຈະຈາກໂລກຂອງມະນຸດໄປ ແລະ ພຣະອົງຈະບໍ່ປະຕິບັດພາລະກິດໃດໆທີ່ຄ້າຍຄືກັນກັບສິ່ງທີ່ພຣະອົງໄດ້ປະຕິບັດເມື່ອພຣະອົງຢູ່ໃນເນື້ອໜັງອີກຄັ້ງ. ຫຼັງຈາກນີ້, ພາລະກິດທຸກຢ່າງຈຶ່ງຖືກປະຕິບັດໂດຍພຣະວິນຍານບໍລິສຸດໂດຍກົງ. ໃນໄລຍະເວລານີ້, ມະນຸດເກືອບບໍ່ສາມາດເຫັນລັກສະນະຂອງຮ່າງກາຍຝ່າຍເນື້ອໜັງຂອງພຣະອົງ; ພຣະອົງບໍ່ສະແດງຕົນເອງຕໍ່ມະນຸດເລີຍ, ແຕ່ຍັງຄົງລີ້ລັບຢູ່ຕະຫຼອດໄປ. ເວລາສຳລັບພາລະກິດຂອງພຣະເຈົ້າທີ່ກາຍມາເປັນເນື້ອໜັງແມ່ນ

ຈຳກັດ. ພາລະກິດຖືກປະຕິບັດໃນຍຸກ, ໄລຍະເວລາ, ປະຊາຊາດໂດຍສະເພາະ ແລະ ໃນທ່າມກາງຜູ້ຄົນໂດຍສະເພາະ. ພາລະກິດນີ້ເປັນຕົວແທນໃຫ້ກັບພາລະກິດທີ່ຢູ່ໃນໄລຍະເວລາຂອງການບັງເກີດເປັນມະນຸດຂອງພຣະເຈົ້າເທົ່ານັ້ນ, ມັນເປັນຕົວແທນຂອງຍຸກນັ້ນ ແລະ ມັນເປັນຕົວແທນໃຫ້ກັບພາລະກິດຂອງພຣະວິນຍານຂອງພຣະເຈົ້າໃນຍຸກໃດໜຶ່ງໂດຍສະເພາະ ແລະ ບໍ່ແມ່ນພາລະກິດທັງໝົດຂອງພຣະອົງ. ສະນັ້ນ ລັກສະນະຂອງພຣະເຈົ້າທີ່ກາຍເປັນເນື້ອໜັງຈຶ່ງຈະບໍ່ຖືກເປີດເຜີຍໃຫ້ກັບທຸກຄົນ. ສິ່ງທີ່ຖືກເປີດເຜີຍອອກໃຫ້ກັບປວງຊົນແມ່ນຄວາມຊອບທຳຂອງພຣະເຈົ້າ ແລະ ອຸປະນິໄສທັງໝົດຂອງພຣະອົງ, ແທນທີ່ຈະເປັນຮູບລັກສະນະຂອງພຣະອົງເມື່ອພຣະອົງກາຍມາເປັນເນື້ອໜັງສອງຄັ້ງ. ມັນບໍ່ແມ່ນລັກສະນະຢ່າງໜຶ່ງຢ່າງດຽວທີ່ຖືກສະແດງໃຫ້ກັບມະນຸດ ຫຼື ບໍ່ແມ່ນສອງລັກສະນະລວມກັນ. ສະນັ້ນ ມັນຈຶ່ງສຳຄັນສຳລັບເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າຄວນຈາກໂລກນີ້ໄປຫຼັງຈາກສຳເລັດພາລະກິດທີ່ພຣະອົງຈຳເປັນຕ້ອງປະຕິບັດ, ຍ້ອນພຣະອົງພຽງແຕ່ມາເພື່ອປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ ແລະ ບໍ່ແມ່ນເພື່ອສະແດງຮູບລັກສະນະຂອງພຣະອົງໃຫ້ຜູ້ຄົນເຫັນ. ເຖິງແມ່ນວ່າຄວາມໝາຍຂອງການບັງເກີດເປັນມະນຸດຈະຖືກເຮັດໃຫ້ສຳເລັດໂດຍການທີ່ພຣະເຈົ້າໄດ້ກາຍເປັນເນື້ອໜັງທັງສອງຄັ້ງແລ້ວກໍຕາມ, ພຣະອົງກໍຍັງຈະບໍ່ສະແດງຕົນເອງອອກຢ່າງເປີດເຜີຍໃຫ້ກັບປະຊາຊາດໃດໜຶ່ງທີ່ບໍ່ເຄີຍເຫັນພຣະອົງມາກ່ອນ. ພຣະເຢຊູຈະບໍ່ສະແດງພຣະອົງເອງໃຫ້ກັບຊາວຢິວດັ່ງດວງຕາເວັນແຫ່ງຄວາມຊອບທຳອີກຄັ້ງ ຫຼື ພຣະອົງຈະບໍ່ຢືນຂຶ້ນຢູ່ເທິງຈອມພູເຂົາໝາກກອກເທດ ແລະ ປາກົດຕົວຕໍ່ທຸກຄົນອີກ; ສິ່ງທີ່ຊາວຢິວໄດ້ເຫັນມີພຽງແຕ່ພາບຂອງພຣະເຢຊູໃນເວລາທີ່ພຣະອົງຢູ່ໃນຢູດາຍ. ນີ້ກໍຍ້ອນວ່າພາລະກິດຂອງພຣະເຢຊູໃນການບັງເກີດເປັນມະນຸດຂອງພຣະອົງຈົບລົງຕັ້ງແຕ່ສອງພັນປີກ່ອນແລ້ວ; ພຣະອົງຈະບໍ່ກັບຄືນສູ່ຢູດາຍໃນຮູບລັກສະນະຂອງຊາວຢິວອີກ, ແລ້ວແຮງໄກທີ່ພຣະອົງຈະສະແດງຕົນເອງໃນຮູບລັກສະນະຂອງຊາວຢິວໃຫ້ຊົນຕ່າງຊາດໄດ້ເຫັນ, ຍ້ອນຮູບລັກສະນະຂອງພຣະເຢຊູທີ່ກາຍມາເປັນເນື້ອໜັງກໍເປັນພຽງຮູບລັກສະນະຂອງຊາວຢິວ ແລະ ບໍ່ແມ່ນລັກສະນະຂອງບຸດມະນຸດທີ່ໂຢຮັນໄດ້ເຫັນ. ເຖິງແມ່ນພຣະເຢຊູສັນຍາກັບຜູ້ຕິດຕາມຂອງພຣະອົງວ່າພຣະອົງຈະກັບຄືນມາອີກຄັ້ງ, ພຣະອົງຈະບໍ່ສະແດງພຣະອົງເອງໃນຮູບລັກສະນະຂອງຊາວຢິວຕໍ່ທຸກຄົນໃນຕ່າງຊາດຢ່າງງ່າຍດາຍ. ພວກເຈົ້າຄວນຮູ້ຈັກວ່າພາລະກິດຂອງພຣະເຈົ້າທີ່ກາຍມາເປັນເນື້ອໜັງກໍຄືການເປີດຍຸກ. ພາລະກິດນີ້ຈຳກັດແຕ່ສອງສາມປີ ແລະ ພຣະອົງບໍ່ສາມາດເຮັດໃຫ້ພາລະກິດທັງໝົດຂອງພຣະວິນຍານຂອງພຣະເຈົ້າສຳເລັດລົງໄດ້ເຊິ່ງເປັນຄືກັບຮູບລັກສະນະຂອງພຣະເຢຊູທີ່ເປັນຊາວຢິວກໍພຽງແຕ່ສາມາດເປັນຕົວແທນໃຫ້ກັບຮູບລັກສະນະຂອງພຣະເຈົ້າໃນຂະນະທີ່ພຣະອົງປະຕິບັດພາລະກິດໃນຢູດາຍເທົ່ານັ້ນ ແລະ ພຣະອົງພຽງແຕ່ສາມາດປະຕິບັດພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນເທົ່ານັ້ນ. ໃນລະຫວ່າງທີ່ພຣະເຢຊູຢູ່ໃນເນື້ອໜັງນັ້ນ, ພຣະອົງບໍ່ສາມາດປະຕິບັດພາລະກິດແຫ່ງການນຳຍຸກດັ່ງກ່າວມາເຖິງຈຸດສິ້ນສຸດໄດ້ ຫຼື ສາມາດທຳລາຍມະນຸດຊາດໄດ້. ສະນັ້ນ ຫຼັງຈາກທີ່ພຣະອົງໄດ້ຖືກຄຶງໃສ່ໄມ້ກາງແຂນ ແລະ ໄດ້ສິ້ນສຸດພາລະກິດຂອງພຣະອົງແລ້ວ, ພຣະອົງກໍຂຶ້ນເມືອສູ່ທີ່ສູງສຸດ ແລະ ເຊື່ອງຊ້ອນພຣະອົງເອງຈາກມະນຸດຕະຫຼອດໄປ. ຈາກນັ້ນເປັນຕົ້ນມາ, ຜູ້ເຊື່ອທີ່ມີສັດທາເຫຼົ່ານັ້ນ

ຈາກຊົນຕ່າງຊາດກໍບໍ່ສາມາດເຫັນການສະແດງອອກຂອງພຣະເຢຊູເຈົ້າໄດ້ອີກ, ພຽງແຕ່ຮູບພາບຂອງພຣະອົງທີ່ພວກເຂົາຕິດຢູ່ເທິງຝາ. ຮູບພາບນີ້ແມ່ນຖືກແຕ້ມຂຶ້ນໂດຍມະນຸດເທົ່ານັ້ນ ແລະ ບໍ່ແມ່ນຮູບພາບລັກສະນະຂອງພຣະເຈົ້າດັ່ງທີ່ພຣະອົງສະແດງພຣະອົງເອງຕໍ່ມະນຸດ. ພຣະເຈົ້າຈະບໍ່ສະແດງຕົນເອງຕໍ່ປວງຊົນຢ່າງເປີດເຜີຍໃນຮູບພາບລັກສະນະທີ່ພຣະອົງກາຍມາເປັນເນື້ອໜັງທັງສອງຄັ້ງ. ພາລະກິດທີ່ພຣະອົງປະຕິບັດທ່າມກາງມະນຸດຊາດແມ່ນເພື່ອເຮັດໃຫ້ພວກເຂົາເຂົ້າໃຈອຸປະນິໄສຂອງພຣະອົງ. ທຸກສິ່ງນີ້ແມ່ນສະແດງຕໍ່ມະນຸດດ້ວຍລັກສະນະຂອງພາລະກິດຂອງຍຸກທີ່ແຕກຕ່າງກັນ; ມັນຖືກເຮັດໃຫ້ສຳເລັດຜ່ານທາງອຸປະນິໄສທີ່ພຣະອົງເຮັດໃຫ້ເປັນທີ່ຮູ້ຈັກ ແລະ ພາລະກິດທີ່ພຣະອົງໄດ້ປະຕິບັດ, ແທນທີ່ຈະຜ່ານທາງການສະແດງອອກຂອງພຣະເຢຊູ. ນັ້ນໝາຍຄວາມວ່າ ລັກສະນະຂອງພຣະເຈົ້າຖືກເຮັດໃຫ້ເປັນທີ່ຮູ້ຈັກຕໍ່ມະນຸດບໍ່ແມ່ນຜ່ານທາງຮູບຮ່າງທີ່ບັງເກີດເປັນມະນຸດ, ແຕ່ກົງກັນຂ້າມແມ່ນຜ່ານທາງພາລະກິດທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດໄດ້ປະຕິບັດ ຜູ້ທີ່ມີທັງລັກສະນະ ແລະ ຮູບຮ່າງ; ແລະ ຜ່ານທາງພາລະກິດຂອງພຣະອົງ, ລັກສະນະຂອງພຣະອົງຈຶ່ງຖືກສະແດງອອກ ແລະ ອຸປະນິໄສຂອງພຣະອົງກໍຖືກເຮັດໃຫ້ເປັນທີ່ຮູ້ຈັກ. ນີ້ຄືຄວາມໝາຍຂອງພາລະກິດທີ່ພຣະອົງປາຖະໜາທີ່ຈະປະຕິບັດໃນເນື້ອໜັງ.

ຫຼັງຈາກທີ່ພາລະກິດຂອງການບັງເກີດເປັນມະນຸດທັງສອງຄັ້ງຂອງພຣະເຈົ້າໄດ້ມາເຖິງຈຸດສິ້ນສຸດ, ພຣະອົງກໍຈະເລີ່ມຕົ້ນສະແດງອຸປະນິໄສທີ່ຊອບທຳຂອງພຣະອົງໃຫ້ກັບຊົນຊາດຂອງຜູ້ທີ່ບໍ່ເຊື່ອທັງຫຼາຍໄດ້ເຫັນ, ອະນຸຍາດໃຫ້ປວງຊົນທັງຫຼາຍເຫັນເຖິງຮູບລັກສະນະຂອງພຣະອົງ. ພຣະອົງຈະສະແດງອຸປະນິໄສຂອງພຣະອົງອອກ ແລະ ດ້ວຍວິທີນີ້ກໍຈະເຮັດໃຫ້ເຫັນແຈ້ງເຖິງຈຸດສິ້ນສຸດຂອງມະນຸດທຸກປະເພດ, ນຳຍຸກເກົ່າມາເຖິງຈຸດສິ້ນສຸດທັງໝົດ. ເຫດຜົນທີ່ວ່າເປັນຫຍັງພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງຈຶ່ງບໍ່ຂະຫຍາຍໄປສູ່ຂອບເຂດທີ່ໃຫຍ່ (ດັ່ງທີ່ພຣະເຢຊູພຽງແຕ່ປະຕິບັດພາລະກິດໃນຢູດາຍເທົ່ານັ້ນ ແລະ ປັດຈຸບັນ ເຮົາປະຕິບັດພາລະກິດທ່າມກາງພວກເຈົ້າເທົ່ານັ້ນ) ກໍຍ້ອນພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງແມ່ນມີຂອບເຂດ ແລະ ຈຳກັດ. ພຣະອົງພຽງແຕ່ປະຕິບັດພາລະກິດໃນໄລຍະເວລາສັ້ນໆໃນລັກສະນະຂອງເນື້ອໜັງປົກກະຕິ ແລະ ທຳມະດາ; ພຣະອົງບໍ່ໃຊ້ເນື້ອໜັງທີ່ບັງເກີດເປັນມະນຸດນີ້ເພື່ອປະຕິບັດພາລະກິດຕະຫຼອດໄປ ຫຼື ພາລະກິດແຫ່ງການປາກົດຕົວຕໍ່ຜູ້ຄົນໃນຊົນຊາດຂອງຜູ້ທີ່ບໍ່ເຊື່ອ. ພາລະກິດທີ່ຢູ່ໃນເນື້ອໜັງແມ່ນໄດ້ຈຳກັດຢູ່ໃນຂອບເຂດເທົ່ານັ້ນ (ເຊັ່ນການປະຕິບັດພາລະກິດໃນຢູດາຍ ຫຼື ທ່າມກາງພວກເຈົ້າເທົ່ານັ້ນ) ແລະ ຫຼັງຈາກນັ້ນ ເນື່ອງຈາກວ່າ ພາລະກິດດັ່ງກ່າວໄດ້ຖືກປະຕິບັດພາຍໃນຂອບເຂດເຫຼົ່ານີ້, ມັນກໍຈະມີໂອກາດສາມາດຖືກຂະຫຍາຍອອກໄປໄດ້. ແນ່ນອນ ພາລະກິດແຫ່ງການຂະຫຍາຍແມ່ນຈະຖືກປະຕິບັດໂດຍພຣະວິນຍານຂອງພຣະອົງໂດຍກົງ ແລະ ຈະບໍ່ແມ່ນພາລະກິດຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງອີກຕໍ່ໄປ. ຍ້ອນພາລະກິດທີ່ຢູ່ໃນເນື້ອໜັງມີຂອບເຂດ ແລະ ບໍ່ຂະຫຍາຍໄປທຸກມຸມຂອງຈັກກະວານ, ດ້ວຍເຫດນີ້ ມັນຈຶ່ງບໍ່ສາມາດເຮັດໃຫ້ສຳເລັດໄດ້. ຜ່ານທາງພາລະກິດທີ່ຢູ່ໃນເນື້ອໜັງ, ພຣະວິນຍານຂອງພຣະອົງປະຕິບັດພາລະກິດທີ່ຈະຕາມມາ. ສະນັ້ນ ພາລະກິດທີ່ຖືກປະຕິບັດໃນເນື້ອໜັງແມ່ນມີທຳມະຊາດຂອງການເລີ່ມຕົ້ນ ເຊິ່ງ

ຖືກປະຕິບັດພາຍໃນຂອບເຂດໃດໜຶ່ງ; ຫຼັງຈາກນີ້, ກໍຈະເປັນພຣະວິນຍານຂອງພຣະອົງເປັນຜູ້ສືບຕໍ່ພາລະກິດນີ້ ແລະ ພຣະອົງປະຕິບັດໃນຂອບເຂດທີ່ໄດ້ຂະຫຍາຍອອກນັ້ນຫຼາຍຂຶ້ນກວ່າເກົ່າ.

ພຣະເຈົ້າສະເດັດມາເພື່ອປະຕິບັດພາລກິດເທິງໂລກນີ້ກໍແມ່ນເພື່ອນຳພາຍຸກນັ້ນ, ພຣະອົງໝາຍເຖິງເພື່ອການເປີດຍຸກໃໝ່ ແລະ ນຳຍຸກເກົ່າໄປສູ່ຈຸດສິ້ນສຸດເທົ່ານັ້ນ. ພຣະອົງບໍ່ໄດ້ມາເພື່ອດຳລົງຊີວິດຕາມເສັ້ນທາງຊີວິດຂອງມະນຸດເທິງແຜ່ນດິນໂລກ, ເພື່ອພົບກັບກັບຄວາມສຸກ ແລະ ຄວາມທຸກຂອງຊີວິດຂອງໂລກມະນຸດດ້ວຍຕົວພຣະອົງເອງ ຫຼື ເພື່ອເຮັດໃຫ້ຄົນໃດຄົນໜຶ່ງສົມບູນດ້ວຍມືຂອງພຣະອົງ ຫຼື ເຝົ້າເບິ່ງຄົນໃດຄົນໜຶ່ງດ້ວຍຕົວພຣະອົງເອງໃນຂະນະທີ່ເຂົາເຕີບໂຕ. ນີ້ບໍ່ແມ່ນພາລະກິດຂອງພຣະອົງ; ພາລະກິດຂອງພຣະອົງແມ່ນພຽງແຕ່ເປັນການເລີ່ມຕົ້ນຍຸກໃໝ່ ແລະ ນຳຍຸກເກົ່າມາສູ່ຈຸດສິ້ນສຸດ. ນັ້ນກໍຄື ພຣະອົງຈະເລີ່ມຕົ້ນຍຸກໃດໜຶ່ງດ້ວຍຕົວພຣະອົງເອງ, ນຳພາອີກຍຸກມາເຖິງຈຸດສິ້ນສຸດດ້ວຍຕົວພຣະອົງເອງ ແລະ ເອົາຊະນະຊາຕານດ້ວຍການປະຕິບັດພາລະກິດຂອງພຣະອົງເອງ. ໃນແຕ່ລະຄັ້ງພຣະອົງປະຕິບັດພາລະກິດຂອງພຣະອົງດ້ວຍຕົວພຣະອົງເອງ, ມັນຄືກັບວ່າພຣະອົງໄດ້ກ້າວຕີນເຂົ້າໄປໃນສະໜາມຮົບ. ທຳອິດ ພຣະອົງມີໄຊຊະນະເໜືອໂລກ ແລະ ມີໄຊຊະນະເໜືອຊາຕານໃນຂະນະທີ່ຢູ່ໃນເນື້ອໜັງ; ພຣະອົງຮັບເອົາສະຫງ່າລາສີທັງໝົດ ແລະ ເປີດຜ້າກັ້ງໃຫ້ກັບພາລະກິດທັງໝົດແຫ່ງເວລາສອງພັນປີ, ເຮັດແບບນັ້ນເພື່ອໃຫ້ຄົນທຸກຄົນເທິງແຜ່ນດິນໂລກມີເສັ້ນທາງຍ່າງທີ່ຖືກຕ້ອງ ແລະ ມີຊີວິດແຫ່ງສັນຕິສຸກ ແລະ ຄວາມຍິນດີທີ່ຈະດຳລົງຊີວິດ. ເຖິງຢ່າງໃດກໍຕາມ ພຣະເຈົ້າບໍ່ສາມາດດຳລົງຊີວິດຢູ່ທ່າມກາງມະນຸດເທິງແຜ່ນດິນໂລກໄດ້ດົນ, ຍ້ອນພຣະເຈົ້າກໍເປັນພຣະເຈົ້າ ແລະ ບໍ່ແມ່ນມະນຸດ. ພຣະອົງບໍ່ສາມາດດຳລົງຊີວິດຕາມຊົ່ວຊີວິດຂອງຄົນທຳມະດາໄດ້ ນັ້ນກໍຄື ພຣະອົງບໍ່ສາມາດອາໄສຢູ່ເທິງແຜ່ນດິນໂລກແບບຄົນທີ່ບໍ່ມີຫຍັງແຕກຕ່າງຈາກຄົນປົກກະຕິທົ່ວໄປ, ຍ້ອນພຣະອົງມີຄວາມເປັນມະນຸດທຳດາພຽງເລັກນ້ອຍຂອງຄົນທຳມະດາເພື່ອລໍ້ລ້ຽງຊີວິດມະນຸດຂອງພຣະອົງເທົ່ານັ້ນ. ເວົ້າອີກຢ່າງກໍຄື ພຣະເຈົ້າຈະເລີ່ມສ້າງຄອບຄົວ, ມີອາຊີບ ແລະ ລ້ຽງດູລູກເທິງແຜ່ນດິນໂລກນີ້ໄດ້ແນວໃດ? ສິ່ງນີ້ຈະບໍ່ສ້າງຄວາມເສື່ອມເສຍຊື່ສຽງໃຫ້ກັບພຣະອົງບໍ? ການທີ່ພຣະອົງມີຄວາມເປັນມະນຸດທຳມະດາໂດຍທຳມະຊາດນັ້ນ ແມ່ນເພື່ອຈຸດປະສົງຂອງການປະຕິບັດພາລະກິດໃນລັກສະນະທີ່ທຳມະດາເທົ່ານັ້ນ, ບໍ່ແມ່ນເພື່ອເຮັດໃຫ້ພຣະອົງສາມາດມີຄອບຄົວ ແລະ ອາຊີບດັ່ງຄົນທຳມະດາ. ຄວາມຮູ້ສຶກທີ່ທຳມະດາຂອງພຣະອົງ, ຄວາມຄິດທີ່ທຳມະດາ ແລະ ການລ້ຽງດູ ແລະ ເສື້ອຜ້າທີ່ທຳມະດາສຳລັບເນື້ອໜັງຂອງພຣະອົງແມ່ນພຽງພໍທີ່ຈະພິສູດວ່າພຣະອົງມີຄວາມເປັນມະນຸດທຳມະດາ; ບໍ່ຈຳເປັນທີ່ຈະໃຫ້ພຣະອົງມີຄອບຄົວ ຫຼື ອາຊີບເພື່ອພິສູດວ່າພຣະອົງປະກອບມີຄວາມເປັນມະນຸດທຳມະດາ. ສິ່ງນີ້ບໍ່ຈຳເປັນແທ້ໆ! ການທີ່ພຣະເຈົ້າມາເທິງແຜ່ນດິນໂລກກໍຄືການທີ່ພຣະທຳກາຍມາເປັນເນື້ອໜັງ; ພຣະອົງຍອມໃຫ້ມະນຸດເຂົ້າໃຈພຣະທຳຂອງພຣະອົງ ແລະ ເຫັນພຣະທຳຂອງພຣະອົງເທົ່ານັ້ນ ນັ້ນກໍຄື ຍອມໃຫ້ມະນຸດເຫັນເຖິງພາລະກິດທີ່ເນື້ອໜັງປະຕິບັດ. ເຈດຕະນາຂອງພຣະອົງບໍ່ແມ່ນໃຫ້ຜູ້ຄົນປະຕິບັດຕໍ່ເນື້ອໜັງຂອງພຣະອົງໃນລັກສະນະໃດໜຶ່ງ, ແຕ່ເພື່ອໃຫ້ມະນຸດເຊື່ອຟັງຈົນເຖິງທີ່ສຸດເທົ່ານັ້ນ ນັ້ນກໍຄື ເຊື່ອຟັງພຣະທຳທຸກຂໍ້ທີ່ອອກມາຈາກປາກຂອງພຣະອົງ ແລະ ຍອມຢູ່ພາຍໃຕ້

ພາລະກິດທຸກຢ່າງທີ່ພຣະອົງປະຕິບັດ. ພຣະອົງພຽງແຕ່ປະຕິບັດພາລະກິດໃນເນື້ອໜັງ; ພຣະອົງບໍ່ໄດ້ມີເຈດຕະນາຂໍໃຫ້ມະນຸດຍົກຍ້ອງສັນລະເສີນຄວາມຍິ່ງໃຫຍ່ ແລະ ຄວາມບໍລິສຸດຂອງເນື້ອໜັງຂອງພຣະອົງ, ແຕ່ກົງກັນຂ້າມ ກັບສະແດງໃຫ້ມະນຸດເຫັນເຖິງສະຕິປັນຍາຂອງພາລະກິດຂອງພຣະອົງ ແລະ ສິດອຳນາດທຸກຢ່າງທີ່ພຣະອົງມີ. ສະນັ້ນ ເຖິງແມ່ນພຣະອົງມີຄວາມເປັນມະນຸດທີ່ໂດດເດັ່ນ, ພຣະອົງກໍບໍ່ໄດ້ປ່າວປະກາດຫຍັງ ແລະ ໃສ່ໃຈແຕ່ກັບພາລະກິດທີ່ພຣະອົງຄວນປະຕິບັດ. ພວກເຈົ້າຄວນຮູ້ວ່າເປັນຫຍັງພຣະເຈົ້າຈຶ່ງກາຍມາເປັນເນື້ອໜັງ ແລະ ບໍ່ຍອມປ່າວປະກາດ ຫຼື ເປັນພະຍານໃຫ້ກັບຄວາມເປັນມະນຸດທຳມະດາຂອງພຣະອົງ, ແຕ່ກົງກັນຂ້າມ ພຣະອົງພຽງແຕ່ປະຕິບັດພາລະກິດທີ່ພຣະອົງປາຖະໜາຈະປະຕິບັດ. ສະນັ້ນ ທຸກສິ່ງທີ່ພວກເຈົ້າສາມາດເຫັນໄດ້ຈາກພຣະເຈົ້າທີ່ບັງເກີດເປັນມະນຸດກໍມີພຽງແຕ່ຄວາມສັກສິດທີ່ພຣະອົງເປັນ; ນີ້ກໍຍ້ອນວ່າ ພຣະອົງບໍ່ເຄີຍປະກາດຄວາມເປັນມະນຸດທີ່ພຣະອົງເປັນໃຫ້ມະນຸດເອົາແບບຢ່າງ. ມີແຕ່ເວລາທີ່ມະນຸດນຳພາຜູ້ຄົນເທົ່ານັ້ນ ເຂົາຈຶ່ງກ່າວເຖິງຄວາມເປັນມະນຸດທີ່ເຂົາເປັນ, ເວົ້າດີຂຶ້ນເພື່ອຮັບເອົາການຊົມເຊີຍ ແລະ ຄວາມເຊື່ອໃຈ, ດ້ວຍເຫດນັ້ນຈຶ່ງບັນບຸພາວະຄວາມເປັນຜູ້ນຳຂອງຄົນອື່ນໄດ້. ໃນທາງກົງກັນຂ້າມ ພຣະເຈົ້າເອົາຊະນະມະນຸດຜ່ານທາງພາລະກິດຂອງພຣະອົງແຕ່ຢ່າງດຽວ (ນັ້ນກໍຄື ພາລະກິດທີ່ມະນຸດບໍ່ສາມາດບັນລຸໄດ້); ມັນບໍ່ສຳຄັນວ່າພຣະອົງຖືກຊື່ນຊົມໂດຍມະນຸດ ຫຼື ເຮັດໃຫ້ມະນຸດບູຊາພຣະອົງກໍ່ຕາມ. ສິ່ງທີ່ພຣະອົງເຮັດກໍມີແຕ່ສັ່ງສອນມະນຸດກ່ຽວກັບຄວາມຮູ້ສຶກເຄົາລົບນັບຖືພຣະອົງ ຫຼື ຄວາມຮູ້ສຶກເຖິງຄວາມບໍ່ສາມາດຢັ່ງເຖິງໄດ້ຂອງພຣະອົງ. ພຣະເຈົ້າບໍ່ຈຳເປັນຕ້ອງເຮັດໃຫ້ມະນຸດປະທັບໃຈ; ສິ່ງທີ່ພຣະອົງຕ້ອງການກໍມີພຽງໃຫ້ເຈົ້າເຄົາລົບພຣະອົງຫຼັງຈາກທີ່ເຈົ້າໄດ້ເປັນພະຍານເຖິງອຸປະນິໄສຂອງພຣະອົງ. ພາລະກິດທີ່ພຣະເຈົ້າປະຕິບັດແມ່ນພາລະກິດຂອງພຣະອົງເອງ; ມະນຸດບໍ່ສາມາດປະຕິບັດພາລະກິດນັ້ນແທນພຣະອົງໄດ້ ຫຼື ມະນຸດບໍ່ສາມາດບັນລຸໄດ້. ມີພຽງພຣະເຈົ້າເທົ່ານັ້ນ ທີ່ສາມາດປະຕິບັດພາລະກິດຂອງພຣະອົງໄດ້ ແລະ ເລີ່ມຕົ້ນຍຸກໃໝ່ເພື່ອນຳພາມະນຸດໄປສູ່ຊີວິດໃໝ່ໄດ້. ພາລະກິດທີ່ພຣະອົງປະຕິບັດແມ່ນເພື່ອເຮັດໃຫ້ມະນຸດສາມາດຄອບຄອງຊີວິດໃໝ່ ແລະ ເຂົ້າສູ່ຍຸກໃໝ່. ພາລະກິດທີ່ເຫຼືອແມ່ນຖືກສົ່ງໃຫ້ກັບຄົນທີ່ມີຄວາມເປັນມະນຸດທຳມະດາທີ່ຖືກຄົນອື່ນຊື່ນຊົມ. ສະນັ້ນ ໃນຍຸກແຫ່ງພຣະຄຸນ ພຣະອົງເຮັດໃຫ້ພາລະກິດສອງພັນປີສຳເລັດໃນເວລາພຽງແຕ່ສາມປີເຄິ່ງຈາກເວລາສາມສິບສາມປີທີ່ພຣະອົງຢູ່ໃນເນື້ອໜັງ. ເມື່ອພຣະເຈົ້າມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດຂອງພຣະອົງ, ພຣະອົງເຮັດໃຫ້ພາລະກິດສອງພັນປີ ຫຼື ພາລະກິດຂອງຍຸກທັງໝົດສຳເລັດລົງພາຍໃນໄລຍະເວລາສອງສາມປີເທົ່ານັ້ນ. ພຣະອົງບໍ່ຖ່ວງເວລາ ແລະ ພຣະອົງບໍ່ຊັກຊ້າ; ພຣະອົງຫຍໍ້ພາລະກິດທີ່ໃຊ້ເວລາຫຼາຍປີເຂົ້າກັນ ເພື່ອວ່າພາລະກິດນັ້ນຈະຖືກເຮັດໃຫ້ສຳເລັດພາຍໃນເວລາສັ້ນໆພຽງສອງສາມປີເທົ່ານັ້ນ. ນີ້ກໍຍ້ອນວ່າ ພາລະກິດທີ່ພຣະອົງປະຕິບັດດ້ວຍຕົວພຣະອົງເອງນັ້ນ ແມ່ນເພື່ອການເປີດທາງອອກ ແລະ ນຳພາໄປສູ່ຍຸກໃໝ່ທັງໝົດ.

# ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (3)

ເມື່ອພຣະເຈົ້າປະຕິບັດພາລະກິດຂອງພຣະອົງ, ພຣະອົງບໍ່ໄດ້ເຂົ້າຮ່ວມໃນການຈັດຕັ້ງ ຫຼື ການເຄື່ອນໄຫວໃດໆ, ແຕ່ປະຕິບັດພັນທະກິດຂອງພຣະອົງໃຫ້ສຳເລັດ. ໃນແຕ່ລະຄັ້ງທີ່ພຣະອົງກາຍມາເປັນເນື້ອໜັງ, ມັນແມ່ນພຽງແຕ່ເພື່ອເຮັດໃຫ້ຂັ້ນຕອນຂອງພາລະກິດສຳເລັດ ແລະ ເລີ່ມຕົ້ນຍຸກໃໝ່. ບັດນີ້ຍຸກແຫ່ງອານາຈັກໄດ້ມາເຖິງແລ້ວ ເຊັ່ນດຽວກັບການຝຶກຝົນຂອງອານາຈັກກໍມາເຖິງແລ້ວ. ຂັ້ນຕອນນີ້ຂອງພາລະກິດບໍ່ແມ່ນພາລະກິດຂອງມະນຸດ ແລະ ມັນບໍ່ແມ່ນເພື່ອປັ້ນມະນຸດຈົນເຖິງລະດັບໃດໜຶ່ງ, ແຕ່ພຽງແຕ່ເພື່ອເຮັດໃຫ້ສ່ວນໜຶ່ງຂອງພາລະກິດຂອງພຣະເຈົ້າສຳເລັດ. ສິ່ງທີ່ພຣະເຈົ້າປະຕິບັດບໍ່ແມ່ນພາລະກິດຂອງມະນຸດ, ມັນບໍ່ແມ່ນເພື່ອບັນລຸຜົນໃດໜຶ່ງໃນການປັ້ນມະນຸດກ່ອນທີ່ຈະຈາກໂລກໄປ; ມັນແມ່ນເພື່ອປະຕິບັດພັນທະກິດຂອງພຣະອົງໃຫ້ສຳເລັດ ແລະ ສຳເລັດພາລະກິດທີ່ພຣະອົງຄວນເຮັດໃຫ້ສຳເລັດ ເຊິ່ງກໍຄືການຈັດກຽມຢ່າງເໝາະສົມສຳລັບພາລະກິດຂອງພຣະອົງເທິງແຜ່ນດິນໂລກ ແລະ ດ້ວຍເຫດນັ້ນຈຶ່ງໄດ້ຮັບສະຫງ່າລາສີ. ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ຄືກັບພາລະກິດຂອງຜູ້ຄົນທີ່ພຣະວິນຍານບໍລິສຸດໄດ້ໃຊ້. ເມື່ອພຣະເຈົ້າມາເພື່ອປະຕິບັດພາລະກິດຂອງພຣະອົງເທິງແຜ່ນດິນໂລກ, ພຣະອົງພຽງແຕ່ສົນໃຈກັບການປະຕິບັດພັນທະຂອງພຣະອົງໃຫ້ສຳເລັດ. ແຕ່ສຳລັບເລື່ອງອື່ນໆທີ່ບໍ່ກ່ຽວຂ້ອງກັບພັນທະກິດຂອງພຣະອົງ, ພຣະອົງເກືອບບໍ່ມີສ່ວນຮ່ວມໃດໆເລີຍ, ຈົນເຖິງຂັ້ນເຮັດຄືບໍ່ຮູ້ບໍ່ເຫັນ. ພຣະອົງພຽງແຕ່ປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດເທົ່ານັ້ນ ແລະ ໜ້ອຍທີ່ສຸດທີ່ພຣະອົງຈະສົນໃຈໃນພາລະກິດທີ່ມະນຸດຄວນປະຕິບັດ. ພາລະກິດທີ່ພຣະອົງປະຕິບັດແມ່ນສິ່ງທີ່ກ່ຽວຂ້ອງກັບຍຸກທີ່ພຣະອົງກຳລັງຢູ່ເທົ່ານັ້ນ ແລະ ກ່ຽວຂ້ອງກັບພັນທະກິດທີ່ພຣະອົງຄວນປະຕິບັດໃຫ້ສຳເລັດ, ຄືກັບວ່າເລື່ອງອື່ນໆທັງໝົດແມ່ນຢູ່ນອກຂອບເຂດຂອງພຣະອົງ. ພຣະອົງບໍ່ປະກອບຕົນເອງດ້ວຍຄວາມຮູ້ພື້ນຖານເພີ່ມຂຶ້ນກ່ຽວກັບການດຳລົງຊີວິດດັ່ງຄົນໆໜຶ່ງທ່າມກາງມວນມະນຸດ ຫຼື ພຣະອົງບໍ່ໄດ້ຮຽນຮູ້ທັກສະສັງຄົມຫຼາຍຂຶ້ນ ຫຼື ປະກອບຕົນເອງດ້ວຍສິ່ງໃດໆທີ່ມະນຸດເຂົ້າໃຈ. ທຸກສິ່ງທີ່ມະນຸດຄວນມີບໍ່ໄດ້ກ່ຽວພັນກັບພຣະອົງເລີຍ ແລະ ພຣະອົງພຽງແຕ່ປະຕິບັດພາລະກິດທີ່ເປັນໜ້າທີ່ຂອງພຣະອົງ. ແລ້ວດ້ວຍເຫດນີ້ ຕາມທີ່ມະນຸດເຂົ້າໃຈ ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນຂາດເຂີນໃນຫຼາຍຢ່າງຈົນພຣະອົງບໍ່ໃສ່ໃຈກັບຫຼາຍໆສິ່ງທີ່ມະນຸດຄວນມີເລີຍ ແລະ ພຣະອົງບໍ່ມີຄວາມເຂົ້າໃຈບັນຫາດັ່ງກ່າວ. ສິ່ງດັ່ງກ່າວທີ່ເປັນຄວາມຮູ້ສາມັນກ່ຽວກັບຊີວິດ ພ້ອມກັບຫຼັກການທີ່ຄຸ້ມຄອງການປະພຶດສ່ວນຕົວ ແລະ ການມີປະຕິກິລິຍາກັບຄົນອື່ນ ແມ່ນປາກົດວ່າ ບໍ່ມີສ່ວນກ່ຽວຂ້ອງຫຍັງກັບພຣະອົງເລີຍ. ແຕ່ເຈົ້າບໍ່ສາມາດຮັບຮູ້ພຣະເຈົ້າທີ່ບັງເກີດເປັນມະນຸດພຽງຈາກຄວາມຜິດປົກກະຕິເລັກນ້ອຍເທົ່ານັ້ນ. ນັ້ນໝາຍຄວາມວ່າ ຄວາມເປັນມະນຸດຂອງພຣະອົງພຽງແຕ່ຮັກສາຊີວິດຂອງພຣະອົງດັ່ງຄົນທຳມະດາຄົນໜຶ່ງ ແລະ ການໃຊ້ເຫດຜົນທຳມະດາຈາກສະໝອງຂອງພຣະອົງ, ທີ່ເຮັດໃຫ້ພຣະອົງມີຄວາມສາມາດແຍກແຍະລະຫວ່າງສິ່ງທີ່ຖືກ ແລະ ຜິດ. ເຖິງຢ່າງໃດກໍຕາມ ພຣະອົງບໍ່ໄດ້ປະກອບດ້ວຍສິ່ງອື່ນອີກ, ດ້ວຍວ່າ ທຸກສິ່ງເຫຼົ່ານັ້ນແມ່ນມະນຸດ (ສິ່ງຖືກສ້າງ) ເທົ່ານັ້ນຄວນມີ.

ພຣະເຈົ້າກາຍມາເປັນເນື້ອໜັງພຽງແຕ່ເພື່ອປະຕິບັດພັນທະກິດຂອງພຣະອົງເອງໃຫ້ສຳເລັດ. ພາລະກິດຂອງພຣະອົງແມ່ນແນໃສ່ຍຸກທັງໝົດ ບໍ່ແມ່ນບຸກຄົນໃດໜຶ່ງ ຫຼື ສະຖານທີ່ໃດໜຶ່ງ ແຕ່ເປັນຈັກກະວານທັງປວງ. ນີ້ແມ່ນທິດທາງຂອງພາລະກິດຂອງພຣະອົງ ແລະ ຫຼັກການທີ່ພຣະອົງປະຕິບັດພາລະກິດ. ບໍ່ມີໃຜສາມາດປ່ຽນແປງສິ່ງນີ້ໄດ້ ແລະ ມະນຸດກໍບໍ່ມີທາງທີ່ຈະມີສ່ວນຮ່ວມໃນສິ່ງນັ້ນໄດ້. ແຕ່ລະຄັ້ງທີ່ພຣະເຈົ້າກາຍມາເປັນເນື້ອໜັງ, ພຣະອົງແມ່ນນຳເອົາພາລະກິດຂອງຍຸກນັ້ນມາກັບພຣະອົງ ແລະ ບໍ່ໄດ້ມີເຈດຕະນາທີ່ຈະດຳລົງຊີວິດຄຽງຂ້າງມະນຸດເປັນເວລາຊາວ, ສາມສິບ, ສີ່ສິບ ຫຼື ແມ່ນແຕ່ເຈັດສິບ ຫຼື ແປດສິບປີ ເພື່ອໃຫ້ເຂົາເຂົ້າໃຈ ແລະ ມີຄວາມເຂົ້າໃຈໃນພຣະອົງຫຼາຍຂຶ້ນ. ບໍ່ຈຳເປັນສຳລັບສິ່ງນັ້ນ! ການເຮັດແບບນີ້ຈະບໍ່ມີທາງເຮັດໃຫ້ຄວາມຮູ້ທີ່ມະນຸດມີກ່ຽວກັບອຸປະນິໄສໂດຍທຳມະຊາດຂອງພຣະອົງນັ້ນເລິກເຊິ່ງຍິ່ງຂຶ້ນ; ກົງກັນຂ້າມ ມັນພຽງແຕ່ຈະເພີ່ມແນວຄວາມຄິດ ແລະ ເຮັດໃຫ້ແນວຄິດ ແລະ ຄວາມຄິດຂອງເຂົາກາຍເປັນຊາກຫີນ. ເພາະສະນັ້ນ ມັນຈຶ່ງເປັນສິ່ງຈຳເປັນທີ່ພວກເຈົ້າທຸກຄົນຕ້ອງເຂົ້າໃຈຢ່າງແທ້ຈິງວ່າ ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນຫຍັງແທ້. ແນ່ນອນວ່າພວກເຈົ້າບໍ່ສາມາດລືມເຫຼືອທີ່ຈະເຂົ້າໃຈພຣະທຳທີ່ເຮົາໄດ້ກ່າວຕໍ່ພວກເຈົ້າ: "ເຮົາມາ ບໍ່ແມ່ນເພື່ອປະສົບກັບຊີວິດຂອງມະນຸດທີ່ປົກກະຕິ"? ພວກເຈົ້າໄດ້ລືມພຣະທຳເຫຼົ່ານີ້ແລ້ວບໍ: "ພຣະເຈົ້າໄດ້ມາເທິງແຜ່ນດິນໂລກບໍ່ແມ່ນເພື່ອດຳລົງຊີວິດຂອງມະນຸດທີ່ປົກກະຕິ"? ພວກເຈົ້າບໍ່ເຂົ້າໃຈຈຸດປະສົງຂອງພຣະເຈົ້າໃນການກາຍມາເປັນເນື້ອໜັງ ຫຼື ພວກເຈົ້າບໍ່ຮູ້ຈັກຄວາມໝາຍຂອງ "ພຣະເຈົ້າຈະສາມາດມາຢູ່ເທິງແຜ່ນດິນໂລກໂດຍມີເຈດຕະນາທີ່ຈະປະສົບກັບຊີວິດຂອງສິ່ງຖືກສ້າງໄດ້ແນວໃດ?" ພຣະເຈົ້າມາເທິງແຜ່ນດິນໂລກພຽງແຕ່ເພື່ອເຮັດໃຫ້ພາລະກິດຂອງພຣະອົງສຳເລັດ ແລະ ສະນັ້ນພາລະກິດຂອງພຣະອົງເທິງແຜ່ນດິນໂລກຈຶ່ງເປັນພຽງໄລຍະສັ້ນ. ພຣະອົງມາເທິງແຜ່ນດິນໂລກໂດຍບໍ່ໄດ້ມີເຈດຕະນາເຮັດໃຫ້ພຣະວິນຍານຂອງພຣະເຈົ້າຝຶກຝົນຮ່າງກາຍທາງເນື້ອໜັງຂອງພຣະອົງເພື່ອໃຫ້ກາຍເປັນມະນຸດສູງສົ່ງທີ່ຈະນຳພາຄຣິສຕະຈັກໄດ້. ເມື່ອພຣະເຈົ້າມາເທິງແຜ່ນດິນໂລກ, ມັນແມ່ນພຣະທຳທີ່ກາຍມາເປັນເນື້ອໜັງ; ເຖິງຢ່າງໃດກໍຕາມ ມະນຸດບໍ່ຮູ້ຈັກເຖິງພາລະກິດຂອງພຣະອົງ ແລະ ໂທດສິ່ງຕ່າງໆໃສ່ພຣະອົງໂດຍການໃຊ້ກຳລັງ. ແຕ່ພວກເຈົ້າທຸກຄົນຄວນເຂົ້າໃຈວ່າພຣະເຈົ້າເປັນ "ພຣະທຳທີ່ກາຍມາເປັນເນື້ອໜັງ" ບໍ່ແມ່ນຮ່າງກາຍທາງເນື້ອໜັງທີ່ຖືກຝຶກຝົນໂດຍພຣະວິນຍານຂອງພຣະເຈົ້າເພື່ອຮັບເອົາບົດບາດຂອງພຣະເຈົ້າໃນຊ່ວງເວລາໃດໜຶ່ງ. ພຣະເຈົ້າເອງບໍ່ແມ່ນຜົນຜະລິດແຫ່ງການຝຶກຝົນ, ແຕ່ເປັນພຣະທຳທີ່ກາຍມາເປັນເນື້ອໜັງ ແລະ ໃນປັດຈຸບັນ ພຣະອົງປະຕິບັດພາລະກິດຂອງພຣະອົງທ່າມກາງພວກເຈົ້າທຸກຄົນຢ່າງເປັນທາງການ. ພວກເຈົ້າທຸກຄົນຮູ້ຈັກ ແລະ ຮັບຮູ້ວ່າການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນຄວາມຈິງ, ແຕ່ພວກເຈົ້າກໍເຮັດຄືກັບວ່າເຈົ້າເຂົ້າໃຈມັນ. ຈາກພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດຈົນເຖິງຄວາມໝາຍ ແລະ ແກ່ນແທ້ຂອງການບັງເກີດເປັນມະນຸດຂອງພຣະອົງ, ພວກເຈົ້າບໍ່ສາມາດເຂົ້າໃຈສິ່ງເຫຼົ່ານີ້ແມ່ນແຕ່ໜ້ອຍດຽວ ແລະ ພຽງແຕ່ເຮັດຕາມຄົນອື່ນໃນການເລົ່າພຣະທຳຢ່າງຄ່ອງແຄ້ວຈາກຄວາມຈື່ຈຳ. ເຈົ້າເຊື່ອວ່າພຣະເຈົ້າທີ່ບັງເກີດເປັນມະນຸດເປັນຕາມທີ່ເຈົ້າຈິນຕະນາການບໍ?

ພຣະເຈົ້າກາຍມາເປັນເນື້ອໜັງພຽງແຕ່ເພື່ອນຳພາຍຸກ ແລະ ເຄື່ອນໄຫວພາລະກິດໃໝ່ເທົ່ານັ້ນ. ມັນຈຳເປັນທີ່ພວກເຈົ້າຈະເຂົ້າໃຈໃນຈຸດນີ້. ສິ່ງນີ້ແມ່ນແຕກຕ່າງຈາກໜ້າທີ່ຂອງມະນຸດຫຼາຍ ແລະ ທັງສອງຢ່າງແມ່ນບໍ່ສາມາດຖືກກ່າວເຖິງດ້ວຍລົມຫາຍໃຈດຽວກັນ. ມະນຸດຕ້ອງຖືກປູກຝັງ ແລະ ຖືກເຮັດໃຫ້ສົມບູນເປັນໄລຍະເວລາດົນນານກ່ອນທີ່ເຂົາຈະສາມາດປະຕິບັດພາລະກິດ ແລະ ປະເພດຂອງຄວາມເປັນມະນຸດທີ່ຈຳເປັນແມ່ນມາຈາກລະດັບທີ່ສູງສົ່ງເປັນພິເສດ. ບໍ່ແມ່ນພຽງມະນຸດຕ້ອງສາມາດຮັກສາຄວາມຮູ້ສຶກຂອງຄວາມເປັນມະນຸດທຳມະດາ, ແຕ່ເຂົາຕ້ອງຍິ່ງເຂົ້າໃຈຫຼາຍໆຫຼັກການ ແລະ ກົດລະບຽບທີ່ຄຸ້ມຄອງການປະພຶດຂອງເຂົາໃນການພົວພັນກັບຄົນອື່ນ ແລະ ຍິ່ງໄປກວ່ານັ້ນ ເຂົາຕ້ອງອຸທິດຕົນທີ່ຈະສຶກສາຫຼາຍຍິ່ງຂຶ້ນກ່ຽວກັບສະຕິປັນຍາ ແລະ ຄວາມຮູ້ທາງຈັນຍາບັນຂອງມະນຸດ. ນີ້ແມ່ນສິ່ງທີ່ມະນຸດຄວນປະກອບມີ. ເຖິງຢ່າງໃດກໍຕາມ ມັນບໍ່ໄດ້ເປັນແບບນີ້ສຳລັບພຣະເຈົ້າທີ່ບັງເກີດເປັນມະນຸດ, ຍ້ອນພາລະກິດຂອງພຣະອົງບໍ່ໄດ້ສະແດງໃຫ້ເຫັນເຖິງມະນຸດ ຫຼື ບໍ່ແມ່ນພາລະກິດຂອງມະນຸດ; ກົງກັນຂ້າມ ມັນຄືການສະແດງອອກໂດຍກົງຂອງການເປັນຢູ່ຂອງພຣະອົງ ແລະ ການປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດໂດຍກົງ. (ໂດຍທຳມະຊາດແລ້ວ ພາລະກິດຂອງພຣະອົງແມ່ນຖືກປະຕິບັດໃນເວລາທີ່ເໝາະສົມ ແລະ ບໍ່ແມ່ນບາງຄັ້ງບາງຄາວ ຫຼື ຕາມເວລາໃດໜຶ່ງ ແລະ ພາລະກິດນັ້ນເລີ່ມຕົ້ນກໍເມື່ອມັນເຖິງເວລາຂອງການປະຕິບັດພັນທະກິດຂອງພຣະອົງໃຫ້ສຳເລັດ). ພຣະອົງບໍ່ມີສ່ວນຮ່ວມໃນຊີວິດຂອງມະນຸດ ຫຼື ພາລະກິດຂອງມະນຸດ ນັ້ນກໍຄື ຄວາມເປັນມະນຸດຂອງພຣະອົງບໍ່ໄດ້ປະກອບດ້ວຍສິ່ງເຫຼົ່ານີ້ (ສິ່ງເຫຼົ່ານີ້ບໍ່ໄດ້ມີຜົນກະທົບຕໍ່ພາລະກິດຂອງພຣະອົງ). ພຣະອົງພຽງແຕ່ປະຕິບັດພັນທະກິດຂອງພຣະອົງໃຫ້ສຳເລັດ ເມື່ອມັນເຖິງເວລາທີ່ພຣະຕ້ອງປະຕິບັດ; ບໍ່ວ່າສະຖານະຂອງພຣະອົງຈະເປັນແນວໃດກໍຕາມ, ພຣະອົງກໍຈະເດີນໄປຂ້າງໜ້າຢ່າງໄວພ້ອມກັບພາລະກິດທີ່ພຣະອົງຄວນປະຕິບັດ. ບໍ່ວ່າມະນຸດຈະຮູ້ຫຍັງກ່ຽວກັບພຣະອົງ ແລະ ບໍ່ວ່າມະນຸດຈະມີແນວຄິດເຫັນຫຍັງກໍຕາມກ່ຽວກັບພຣະອົງ, ພາລະກິດຂອງພຣະອົງບໍ່ໄດ້ຮັບຜົນກະທົບທັງສິ້ນ. ຕົວຢ່າງເຊັ່ນ ເມື່ອພຣະເຢຊູປະຕິບັດພາລະກິດຂອງພຣະອົງ, ບໍ່ມີໃຜຮູ້ຈັກວ່າພຣະອົງແມ່ນໃຜກັນແທ້, ແຕ່ພຣະອົງກໍເດີນໄປຂ້າງໜ້າຢ່າງໄວກັບພາລະກິດຂອງພຣະອົງ. ບໍ່ມີສິ່ງໃດຂັດຂວາງພຣະອົງບໍ່ໃຫ້ປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ. ສະນັ້ນ ພຣະອົງຈຶ່ງບໍ່ໄດ້ສາລະພາບ ຫຼື ປະກາດຕົວຕົນຂອງພຣະເອງໄວ້ລ່ວງໜ້າ ແລະ ພຽງແຕ່ປ່ອຍໃຫ້ມະນຸດຕິດຕາມພຣະອົງເອງ. ໂດຍທຳມະຊາດແລ້ວ ສິ່ງນີ້ບໍ່ໄດ້ເປັນພຽງແຕ່ຄວາມຖ່ອມຕົວຂອງພຣະເຈົ້າເທົ່ານັ້ນ; ແຕ່ຍັງເປັນວິທີທີ່ພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງ. ພຣະອົງພຽງແຕ່ສາມາດປະຕິບັດພາລະກິດໃນລັກສະນະນີ້, ຍ້ອນມະນຸດບໍ່ມີທາງຮັບຮູ້ພຣະອົງໄດ້ດ້ວຍສາຍຕາເປົ່າ. ເຖິງແມ່ນມະນຸດຈະຮັບຮູ້ພຣະອົງ, ເຂົາກໍຈະບໍ່ສາມາດຊ່ວຍໃນພາລະກິດຂອງພຣະອົງໄດ້. ຍິ່ງໄປກວ່ານັ້ນ, ພຣະອົງບໍ່ໄດ້ກາຍມາເປັນເນື້ອໜັງເພື່ອໃຫ້ມະນຸດມາຮູ້ຈັກກັບເນື້ອໜັງຂອງພຣະອົງ; ມັນແມ່ນເພື່ອປະຕິບັດພາລະກິດ ແລະ ເຮັດໃຫ້ພັນທະກິດຂອງພຣະອົງສຳເລັດ. ດ້ວຍເຫດຜົນນີ້, ພຣະອົງຈຶ່ງບໍ່ໃຫ້ຄວາມສຳຄັນໃນການເຮັດໃຫ້ຕົວຕົນຂອງພຣະອົງເປັນທີ່ຮູ້ຈັກກັນໂດຍທົ່ວໄປ. ເມື່ອພຣະອົງໄດ້ເຮັດໃຫ້ພາລະກິດທັງໝົດທີ່ພຣະອົງຄວນປະຕິບັດນັ້ນສຳເລັດລົງ, ຕົວຕົນ ແລະ ສະຖານະ

ທັງໝົດຂອງພຣະອົງກໍຊັດແຈ້ງຕໍ່ມະນຸດໂດຍທຳມະຊາດ. ພຣະເຈົ້າທີ່ກາຍມາເປັນເນື້ອໜັງສືບຕໍ່ຢູ່ແບບງຽບໆ ແລະ ບໍ່ປະກາດຫຍັງເລີຍ. ພຣະອົງບໍ່ສົນໃຈຕໍ່ມະນຸດ ຫຼື ຕໍ່ວິທີທີ່ມະນຸດກ້າວໄປຂ້າງໜ້າພ້ອມກັບການຕິດຕາມພຣະອົງ, ພຽງແຕ່ເດີນໄປຂ້າງໜ້າຢ່າງໄວເພື່ອປະຕິບັດພັນທະກິດຂອງພຣະອົງໃຫ້ສຳເລັດ ແລະ ປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ. ບໍ່ມີໃຜສາມາດຢືນຂວາງທາງພາລະກິດຂອງພຣະອົງໄດ້. ເມື່ອເວລາທີ່ພຣະອົງຈະສິ້ນສຸດພາລະກິດຂອງພຣະອົງມາເຖິງ, ມັນກໍຈະສິ້ນສຸດລົງໂດຍບໍ່ມີຫຍັງຜິດພາດ ແລະ ຖືກນຳໄປສູ່ຈຸດສຸດທ້າຍ ແລະ ບໍ່ມີໃຜສາມາດສັ່ງການໄດ້. ພຽງແຕ່ຫຼັງຈາກທີ່ພຣະອົງໄປຈາກມະນຸດເມື່ອໄດ້ສຳເລັດພາລະກິດຂອງພຣະອົງ ມະນຸດຈຶ່ງຈະເຂົ້າໃຈພາລະກິດທີ່ພຣະອົງປະຕິບັດ, ເຖິງແມ່ນຍັງບໍ່ຊັດແຈ້ງທັງໝົດ. ອາດໃຊ້ເວລາດົນທີ່ມະນຸດຈະເຂົ້າໃຈຢ່າງສົມບູນກ່ຽວກັບເຈດຕະນາທີ່ພຣະອົງເລີ່ມປະຕິບັດພາລະກິດຂອງພຣະອົງທຳອິດ. ເວົ້າອີກແບບໜຶ່ງກໍຄື ພາລະກິດຂອງຍຸກຂອງພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນຖືກແບ່ງອອກເປັນສອງສ່ວນ. ສ່ວນໜຶ່ງປະກອບດ້ວຍພາລະກິດທີ່ເນື້ອໜັງຂອງການບັງເກີດເປັນມະນຸດຂອງພຣະເຈົ້າເອງປະຕິບັດ ແລະ ພຣະທຳຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າເອງກ່າວ. ຫຼັງຈາກທີ່ພັນທະກິດຂອງເນື້ອໜັງຂອງພຣະອົງຖືກເຮັດໃຫ້ສຳເລັດຢ່າງຄົບຖ້ວນ, ອີກສ່ວນຂອງພາລະກິດກໍຍັງຕ້ອງໄດ້ປະຕິບັດໂດຍຄົນທີ່ພຣະວິນຍານບໍລິສຸດໃຊ້. ໃນເວລານີ້ ມະນຸດຄວນປະຕິບັດໜ້າທີ່ຂອງເຂົາ, ຍ້ອນພຣະເຈົ້າໄດ້ເປີດທົ່ງທາງແລ້ວ ແລະ ມະນຸດຈຳເປັນຕ້ອງຍ່າງດ້ວຍຕົນເອງ. ນັ້ນໝາຍຄວາມວ່າ ພຣະເຈົ້າທີ່ກາຍມາເປັນເນື້ອໜັງປະຕິບັດສ່ວນໜຶ່ງຂອງພາລະກິດ ແລະ ຫຼັງຈາກນັ້ນ ພຣະວິນຍານບໍລິສຸດ ແລະ ຄົນທີ່ພຣະວິນຍານບໍລິສຸດໃຊ້ກໍຈະຮັບຊ່ວງຕໍ່ໄປຂອງພາລະກິດນີ້. ສະນັ້ນ ໃນຂັ້ນຕອນນີ້ ມະນຸດຄວນຮູ້ຈັກວ່າແມ່ນຫຍັງຄືພາລະກິດທີ່ພຣະເຈົ້າທີ່ກາຍມາເປັນເນື້ອໜັງປະຕິບັດເປັນຫຼັກ ແລະ ເຂົາຕ້ອງເຂົ້າໃຈວ່າແມ່ນຫຍັງຄືຄວາມໝາຍແທ້ຈິງຂອງພຣະເຈົ້າທີ່ກາຍເປັນມະນຸດ ແລະ ແມ່ນຫຍັງຄືພາລະກິດທີ່ພຣະເຈົ້າຄວນປະຕິບັດ, ແທນທີ່ຈະ ແລະ ບໍ່ຮຽກຮ້ອງຈາກພຣະເຈົ້າຕາມການຕ້ອງການຂອງມະນຸດ. ໃນທີ່ນີ້ມີຂໍ້ຜິດພາດຂອງມະນຸດ, ແນວຄິດຂອງເຂົາ ແລະ ຍິ່ງກວ່ານັ້ນແມ່ນຄວາມບໍ່ເຊື່ອຟັງຂອງເຂົາ.

ພຣະເຈົ້າກາຍມາເປັນເນື້ອໜັງໂດຍບໍ່ໄດ້ມີເຈດຕະນາທີ່ຈະໃຫ້ມະນຸດຮູ້ຈັກເນື້ອໜັງຂອງພຣະອົງ ຫຼື ເຮັດໃຫ້ມະນຸດແຍກແຍະຄວາມແຕກຕ່າງລະຫວ່າງເນື້ອໜັງຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ເນື້ອໜັງມະນຸດ ຫຼື ພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງເພື່ອຝຶກຝົນອຳນາດໃນການແຍກແຍະຂອງມະນຸດ ແລະ ແຮງໄກເລີຍທີ່ພຣະອົງຈະເຮັດແບບນັ້ນໂດຍມີເຈດຕະນາທີ່ຈະຍອມໃຫ້ມະນຸດນະມັດສະການເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ, ເພື່ອຮັບເອົາສະຫງ່າລາສີທີ່ຍິ່ງໃຫຍ່ທີ່ສຸດ. ບໍ່ມີຫຍັງໃນບັນດາສິ່ງເຫຼົ່ານີ້ທີ່ເປັນເຈດຕະນາຂອງພຣະເຈົ້າໃນການກາຍມາເປັນເນື້ອໜັງ ຫຼື ພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງເພື່ອກ່າວໂທດມະນຸດ ຫຼື ຕັ້ງໃຈເພື່ອເປີດໂປງມະນຸດ ຫຼື ເພື່ອເຮັດໃຫ້ສິ່ງຕ່າງໆລຳບາກສຳລັບເຂົາ. ບໍ່ມີຫຍັງໃນບັນດາສິ່ງເຫຼົ່ານີ້ທີ່ເປັນເຈດຕະນາຂອງພຣະເຈົ້າ. ທຸກຄັ້ງທີ່ພຣະເຈົ້າກາຍມາເປັນເນື້ອໜັງ, ມັນເປັນຮູບແບບໜຶ່ງຂອງພາລະກິດທີ່ບໍ່ສາມາດຫຼີກເວັ້ນໄດ້. ມັນແມ່ນເພື່ອເຫັນແກ່ພາລະກິດທີ່ຍິ່ງໃຫຍ່ຂອງພຣະອົງ ແລະ ການຄຸ້ມຄອງທີ່ຍິ່ງໃຫຍ່ຂອງພຣະອົງ ພຣະອົງຈຶ່ງ

ປະຕິບັດແບບທີ່ພຣະອົງໄດ້ເຮັດ ແລະ ບໍ່ແມ່ນຍ້ອນເຫດຜົນທີ່ມະນຸດຈິນຕະນາການ. ພຣະເຈົ້າມາສູ່ແຜ່ນດິນໂລກຕາມທີ່ພາລະກິດຂອງພຣະອົງຮຽກຮ້ອງເທົ່ານັ້ນ ແລະ ມີແຕ່ເມື່ອຈຳເປັນເທົ່ານັ້ນ. ພຣະອົງບໍ່ມາເທິງແຜ່ນດິນໂລກໂດຍມີເຈດຕະນາທີ່ຈະເບິ່ງໄປອ້ອມໆ ແຕ່ເພື່ອປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ. ແລ້ວເປັນຫຍັງພຣະອົງຈຶ່ງຮັບເອົາພາລະໜັກໜ່ວງແບບນັ້ນ ແລະ ຮັບເອົາຄວາມສ່ຽງທີ່ຍິ່ງໃຫຍ່ດັ່ງກ່າວເພື່ອປະຕິບັດພາລະກິດຂອງພຣະອົງ? ພຣະເຈົ້າກາຍມາເປັນເນື້ອໜັງພຽງແຕ່ເມື່ອພຣະອົງຈຳເປັນຕ້ອງເຮັດ ແລະ ມີຄວາມໝາຍທີ່ພິເສດຢູ່ສະເໝີ. ຖ້າບໍ່ແມ່ນເພື່ອເຫັນແກ່ການເຮັດໃຫ້ຜູ້ຄົນຫຼຽວເບິ່ງພຣະອົງ ແລະ ແຜ່ຂະຫຍາຍຂອບເຂດຂອງພວກເຂົາ, ແລ້ວແນ່ນອນທີ່ສຸດ ພຣະອົງແມ່ນບໍ່ໄດ້ມາຢູ່ທ່າມກາງຜູ້ຄົນຢ່າງງ່າຍດາຍ. ພຣະອົງມາສູ່ແຜ່ນດິນໂລກເພື່ອເຫັນແກ່ການຄຸ້ມຄອງຂອງພຣະອົງ ແລະ ພາລະກິດທີ່ຍິ່ງໃຫຍ່ຂອງພຣະອົງ ແລະ ເພື່ອວ່າພຣະອົງອາດໄດ້ຮັບເອົາມະນຸດຊາດຫຼາຍກວ່າເກົ່າ. ພຣະອົງມາເພື່ອເປັນຕົວແທນໃຫ້ກັບຍຸກ, ພຣະອົງມາເພື່ອເອົາຊະນະຊາຕານ ແລະ ພຣະອົງຊົງນຸ່ງຫົ່ມໃຫ້ພຣະອົງເອງດ້ວຍເນື້ອໜັງເພື່ອເອົາຊະນະຊາຕານ. ຍິ່ງໄປກວ່ານັ້ນ ພຣະອົງມາເພື່ອນຳພາມະນຸດຊາດທັງປວງໃນການດຳລົງຊີວິດຂອງພວກເຂົາ. ທຸກສິ່ງເຫຼົ່ານີ້ກ່ຽວຂ້ອງກັບການຄຸ້ມຄອງຂອງພຣະອົງ ແລະ ມັນກ່ຽວຂ້ອງກັບພາລະກິດຂອງຈັກກະວານທັງປວງ. ຖ້າພຣະເຈົ້າກາຍມາເປັນເນື້ອໜັງພຽງແຕ່ເພື່ອເຮັດໃຫ້ມະນຸດມາຮູ້ຈັກເນື້ອໜັງຂອງພຣະອົງ ແລະ ເປີດຕາຂອງຜູ້ຄົນ, ແລ້ວເປັນຫຍັງພຣະອົງຈຶ່ງບໍ່ເດີນທາງໄປທຸກປະເທດ? ສິ່ງນີ້ຈະບໍ່ເປັນເລື່ອງງ່າຍທີ່ສຸດບໍ? ແຕ່ພຣະອົງບໍ່ໄດ້ເຮັດແບບນັ້ນ, ກົງກັນຂ້າມ ພຣະອົງເລືອກສະຖານທີ່ເໝາະສົມທີ່ຈະປັກຫຼັກ ແລະ ເລີ່ມຕົ້ນພາລະກິດທີ່ພຣະອົງຄວນປະຕິບັດ. ມີພຽງແຕ່ເນື້ອໜັງນີ້ເທົ່ານັ້ນທີ່ມີຄວາມໝາຍຢ່າງຫຼວງຫຼາຍ. ພຣະອົງເປັນຕົວແທນໃຫ້ກັບຍຸກທັງໝົດ ແລະ ຍັງປະຕິບັດພາລະກິດຂອງຍຸກທັງໝົດ; ພຣະອົງນຳຍຸກເກົ່າມາເຖິງຈຸດສິ້ນສຸດ ແລະ ເລີ່ມຕົ້ນຍຸກໃໝ່. ທຸກສິ່ງນີ້ແມ່ນເລື່ອງທີ່ສຳຄັນເຊິ່ງກ່ຽວຂ້ອງກັບການຄຸ້ມຄອງຂອງພຣະເຈົ້າ ແລະ ທັງໝົດນີ້ຄືຄວາມໝາຍຂອງຂັ້ນຕອນໜຶ່ງຂອງພາລະກິດທີ່ພຣະເຈົ້າໄດ້ມາເທິງແຜ່ນດິນໂລກເພື່ອປະຕິບັດ. ເມື່ອພຣະເຢຊູມາເທິງແຜ່ນດິນໂລກ, ພຣະອົງພຽງແຕ່ກ່າວພຣະທຳບາງຂໍ້ ແລະ ປະຕິບັດພາລະກິດບາງຢ່າງ; ພຣະອົງບໍ່ໄດ້ສົນໃຈກັບຊີວິດຂອງມະນຸດ ແລະ ພຣະອົງຈາກໄປທັນທີທີ່ພຣະອົງໄດ້ເຮັດໃຫ້ພາລະກິດຂອງພຣະອົງສຳເລັດລົງ. ໃນປັດຈຸບັນ, ເມື່ອເຮົາໄດ້ສຳເລັດການກ່າວ ແລະ ສົ່ງຕໍ່ພຣະທຳຂອງເຮົາໄປໃຫ້ກັບພວກເຈົ້າ ແລະ ເມື່ອພວກເຈົ້າທຸກຄົນໄດ້ເຂົ້າໃຈ, ບາດກ້າວນີ້ໃນພາລະກິດຂອງເຮົາກໍຈະສິ້ນສຸດລົງ, ບໍ່ວ່າຊີວິດຂອງພວກເຈົ້າຈະເປັນແນວໃດກໍຕາມ. ໃນອະນາຄົດ ມີບາງຄົນທີ່ຈະສືບຕໍ່ບາດກ້າວນີ້ໃນພາລະກິດຂອງເຮົາ ແລະ ສືບຕໍ່ປະຕິບັດພາລະກິດເທິງແຜ່ນດິນໂລກຕາມພຣະທຳເຫຼົ່ານີ້; ໃນເວລານັ້ນ ພາລະກິດຂອງມະນຸດ ແລະ ການກໍ່ສ້າງຂອງມະນຸດຈະເລີ່ມຕົ້ນຂຶ້ນ. ແຕ່ໃນປັດຈຸບັນ ພຣະເຈົ້າພຽງແຕ່ປະຕິບັດພາລະກິດຂອງພຣະອົງເພື່ອເຮັດໃຫ້ພັນທະກິດຂອງພຣະອົງສຳເລັດ ແລະ ເພື່ອເຮັດໃຫ້ຂັ້ນຕອນໜຶ່ງຂອງພາລະກິດຂອງພຣະອົງສຳເລັດລົງ. ພຣະເຈົ້າປະຕິບັດພາລະກິດໃນລັກສະນະທີ່ບໍ່ຄືກັນກັບມະນຸດ. ມະນຸດມັກການຊຸມນຸມກັນ ແລະ ການປະຊຸມ ແລະ ໃຫ້ຄວາມສຳຄັນກັບພິທີກຳ, ໃນຂະນະທີ່ສິ່ງທີ່ພຣະເຈົ້າກຽດຊັງທີ່ສຸດແມ່ນການ

ຊຸມນຸມກັນ ແລະ ການພົບປະກັນຂອງມະນຸດ. ພຣະເຈົ້າສົນທະນາ ແລະ ກ່າວກັບມະນຸດຢ່າງບໍ່ເປັນທາງການ; ນີ້ແມ່ນພາລະກິດຂອງພຣະເຈົ້າ ເຊິ່ງຖືກປ່ອຍອອກຢ່າງເປັນພິເສດ ແລະ ຍັງເຮັດໃຫ້ພວກເຈົ້າເປັນອິດສະຫຼະ. ເຖິງຢ່າງໃດກໍຕາມ ເຮົາກຽດຊັງການຊຸມນຸມກັບພວກເຈົ້າແທ້ໆ ແລະ ເຮົາບໍ່ສາມາດລຶ້ງກັບຊີວິດທີ່ມີລະບຽບວິໄນເຄັ່ງຄັດແບບພວກເຈົ້າໄດ້. ເຮົາກຽດຊັງກົດລະບຽບທີ່ສຸດ; ພວກມັນວາງຂໍ້ກຳນົດໃຫ້ມະນຸດຈົນເຖິງຈຸດທີ່ເຮັດໃຫ້ເຂົາຢ້ານທີ່ຈະເຄື່ອນໄຫວ, ຢ້ານທີ່ຈະເວົ້າ ແລະ ຢ້ານທີ່ຈະຮ້ອງເພງ, ສາຍຕາຂອງເຂົາຈ້ອງເບິ່ງແຕ່ເຈົ້າ. ເຮົາກຽດຊັງລັກສະນະການເຕົ້າໂຮມກັນຂອງພວກເຈົ້າທີ່ສຸດ ແລະ ເຮົາກໍກຽດຊັງການຊຸມນຸມໃຫຍ່ທີ່ສຸດ. ເຮົາຂໍປະຕິເສດທີ່ຈະຊຸມນຸມກັນກັບພວກເຈົ້າໃນລັກສະນະນີ້, ຍ້ອນລັກສະນະຂອງການດຳລົງຊີວິດແບບນີ້ເຮັດໃຫ້ຄົນໜຶ່ງຮູ້ສຶກວ່າຖືກຜູກມັດ ແລະ ພວກເຈົ້າກໍປະຕິບັດຕາມພິທີກຳ ແລະ ກົດລະບຽບຫຼາຍເກີນໄປ. ຖ້າພວກເຈົ້າໄດ້ຮັບອະນຸຍາດໃຫ້ນຳພາ ພວກເຈົ້າກໍຈະນຳພາ ທຸກຄົນໄປສູ່ຂອບເຂດຂອງກົດລະບຽບ ແລະ ພວກເຂົາກໍຈະບໍ່ມີທາງປະວາງກົດລະບຽບພາຍໃຕ້ການນຳພາຂອງພວກເຈົ້າໄດ້; ກົງກັນຂ້າມ ບັນຍາກາດຂອງສາສະໜາຈະຍິ່ງຮຸນແຮງຫຼາຍຂຶ້ນ ແລະ ການປະຕິບັດຂອງມະນຸດກໍພຽງແຕ່ຈະສືບຕໍ່ເພີ່ມທະວີ. ບາງຄົນສືບຕໍ່ສົນທະນາ ແລະ ເວົ້າເມື່ອພວກເຂົາເຕົ້າໂຮມກັນ ແລະ ພວກເຂົາບໍ່ເຄີຍຮູ້ສຶກເມື່ອຍຈັກເທື່ອ ແລະ ບາງຄົນສາມາດສືບຕໍ່ເທດສະໜາເປັນເວລາຫຼາຍສິບມື້ໂດຍບໍ່ມີຢຸດເຊົາ. ທຸກສິ່ງເຫຼົ່ານີ້ຖືວ່າເປັນການຊຸມນຸມ ແລະ ການພົບປະກັນຢ່າງໃຫຍ່ຫຼວງຂອງມະນຸດ; ພວກເຂົາບໍ່ມີຫຍັງກ່ຽວຂ້ອງກັບຊີວິດແຫ່ງການກິນ ແລະ ດື່ມ, ການເພີດເພີນ ຫຼື ຈິດວິນຍານຂອງການໄດ້ຮັບອິດສະຫຼະ. ທຸກສິ່ງເຫຼົ່ານີ້ແມ່ນການພົບປະກັນ! ການພົບປະກັນເພື່ອຮ່ວມງານຂອງພວກເຈົ້າ ພ້ອມກັບການຊຸມນຸມທັງໃຫຍ່ ແລະ ນ້ອຍ ລ້ວນແລ້ວແຕ່ເປັນຕາລັງກຽດສຳລັບເຮົາ ແລະ ເຮົາກໍບໍ່ຮູ້ສຶກສົນໃຈໃນສິ່ງເຫຼົ່ານັ້ນຈັກເທື່ອ. ນີ້ແມ່ນຫຼັກການທີ່ເຮົາປະຕິບັດພາລະກິດ: ເຮົາບໍ່ເຕັມໃຈທີ່ຈະເທດສະໜາໃນລະຫວ່າງການຊຸມນຸມ ຫຼື ເຮົາບໍ່ປາຖະໜາທີ່ຈະປະກາດຫຍັງກໍຕາມໃນບ່ອນຊຸມນຸມສາທາລະນະທີ່ໃຫຍ່ໂຕ ແລະ ແຮງໄກທີ່ເຮົາຈະໂຮມພວກເຈົ້າທຸກຄົນເພື່ອການປະຊຸມພິເສດເປັນເວລາສອງສາມມື້. ເຮົາບໍ່ເຫັນດ້ວຍວ່າພວກເຈົ້າທຸກຄົນຄວນນັ່ງຢ່າງຮຽບຮ້ອຍ ແລະ ເໝາະສົມໃນທີ່ຊຸມນຸມ; ເຮົາກຽດຊັງທີ່ຈະເຫັນພວກເຈົ້າດຳລົງຊີວິດພາຍໃນຂໍ້ຈຳກັດຂອງພິທີກຳໃດກໍຕາມທີ່ຖືກມອບໃຫ້ ແລະ ຍິ່ງໄປກວ່ານັ້ນ ເຮົາປະຕິເສດທີ່ຈະມີສ່ວນໃນພິທີກຳດັ່ງກ່າວຂອງພວກເຈົ້າ. ຍິ່ງພວກເຈົ້າເຮັດແບບນີ້ຫຼາຍສໍ່າໃດ, ເຮົາກໍຍິ່ງພົບວ່າມັນເປັນຕາລັງກຽດຫຼາຍສໍ່ານັ້ນ. ເຮົາບໍ່ມີຄວາມສົນໃຈແມ່ນແຕ່ໜ້ອຍດຽວໃນພິທີກຳເຫຼົ່ານີ້ ແລະ ກົດລະບຽບຂອງພວກເຈົ້າ; ບໍ່ວ່າພວກເຈົ້າຈະເຮັດພວກມັນອອກມາໄດ້ດີສໍ່າໃດກໍຕາມ, ເຮົາກໍພົບວ່າສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຕາລັງກຽດ. ມັນບໍ່ແມ່ນວ່າການຈັດແຈງຂອງພວກເຈົ້າບໍ່ເໝາະສົມ ຫຼື ພວກເຈົ້າຕໍ່າຕ້ອຍເກີນໄປ; ມັນເປັນຍ້ອນເຮົາກຽດຊັງລັກສະນະການດຳລົງຊີວິດຂອງພວກເຈົ້າ ແລະ ຍິ່ງໄປກວ່ານັ້ນ ເຮົາບໍ່ສາມາດລຶ້ງເຄີຍກັບສິ່ງນີ້ໄດ້. ພວກເຈົ້າບໍ່ເຂົ້າໃຈແມ່ນແຕ່ໜ້ອຍດຽວກ່ຽວກັບພາລະກິດທີ່ເຮົາປາຖະໜາຈະປະຕິບັດ. ເມື່ອພຣະເຢຊູປະຕິບັດພາລະກິດຂອງພຣະອົງເມື່ອກ່ອນ ຫຼັງຈາກໃຫ້ການເທດສະໜາໃນສະຖານທີ່ແຫ່ງໃດໜຶ່ງ, ພຣະອົງຈະພາສາວົກຂອງພຣະອົງ

ອອກຈາກເມືອງ ແລະ ເວົ້າກັບພວກເຂົາກ່ຽວກັບຫົນທາງທີ່ມັນຈຳເປັນຕໍ່ພວກເຂົາທີ່ຈະເຂົ້າໃຈ. ພຣະອົງມັກປະຕິບັດພາລະກິດໃນລັກສະນະດັ່ງກ່າວນີ້ສະເໝີ. ພາລະກິດຂອງພຣະອົງທີ່ຢູ່ທ່າມກາງຝູງຊົນແມ່ນມີໜ້ອຍຫຼາຍ. ຕາມສິ່ງທີ່ພວກເຈົ້າຮຽກຮ້ອງຈາກພຣະອົງ, ພຣະເຈົ້າທີ່ກາຍມາເປັນເນື້ອໜັງບໍ່ຄວນມີຊີວິດຂອງມະນຸດທີ່ປົກກະຕິ; ພຣະອົງຕ້ອງປະຕິບັດພາລະກິດຂອງພຣະອົງ ແລະ ບໍ່ວ່າພຣະອົງຈະນັ່ງ, ຢືນ ຫຼື ຍ່າງ, ພຣະອົງກໍຕ້ອງໄດ້ກ່າວ. ພຣະອົງຕ້ອງປະຕິບັດພາລະກິດຢູ່ຕະລອດເວລາ ແລະ ບໍ່ສາມາດຢຸດ "ການດຳເນີນງານ" ຂອງພຣະອົງໄດ້ຈັກເທື່ອ, ບໍ່ດັ່ງນັ້ນ ພຣະອົງຈະປະລະໜ້າທີ່ຂອງພຣະອົງ. ການຮຽກຮ້ອງເຫຼົ່ານີ້ຈາກມະນຸດແມ່ນເໝາະສົມຕໍ່ຄວາມຮູ້ສຶກຂອງມະນຸດບໍ? ຄວາມຊື່ສັດຂອງພວກເຈົ້າຢູ່ໃສ? ພວກເຈົ້າບໍ່ຮຽກຮ້ອງຫຼາຍເກີນໄປບໍ? ເຮົາຕ້ອງການໃຫ້ເຈົ້າກວດສອບເຮົາໃນຂະນະທີ່ເຮົາປະຕິບັດພາລະກິດບໍ? ເຮົາຕ້ອງການໃຫ້ເຈົ້າຄວບຄຸມໃນຂະນະທີ່ເຮົາປະຕິບັດພັນທະກິດຂອງເຮົາໃຫ້ສຳເລັດບໍ? ເຮົາຮູ້ຢ່າງດີວ່າແມ່ນຫຍັງຄືພາລະກິດທີ່ເຮົາຄວນປະຕິບັດ ແລະ ເມື່ອໃດທີ່ເຮົາຄວນປະຕິບັດພາລະກິດນັ້ນ; ບໍ່ຈຳເປັນຕ້ອງໃຫ້ຄົນອື່ນແຊກແຊງ. ບາງເທື່ອ ສຳລັບເຈົ້າ ມັນອາດຈະເບິ່ງຄືກັບວ່າເຮົາບໍ່ໄດ້ເຮັດຫຍັງຫຼາຍ, ແຕ່ໃນຕອນນັ້ນ ພາລະກິດຂອງເຮົາກໍເຖິງຈຸດສິ້ນສຸດແລ້ວ. ຕົວຢ່າງເຊັ່ນ ພຣະທຳຂອງພຣະເຢຊູທີ່ຢູ່ໃນພຣະກິດຕິຄຸນທັງສີ່: ພຣະທຳເຫຼົ່ານັ້ນບໍ່ໄດ້ຈຳກັດຄືກັນບໍ? ໃນເວລານັ້ນ ເມື່ອພຣະເຢຊູເຂົ້າສູ່ທຳມະສາລາ ແລະ ເທດສະໜາ, ພຣະອົງເທດສະໜາຍາວທີ່ສຸດແມ່ນປະມານສອງສາມນາທີ ແລະ ເມື່ອພຣະອົງກ່າວຈົບແລ້ວ, ພຣະອົງກໍນຳພາສາວົກຂອງພຣະອົງຂຶ້ນເທິງເຮືອ ແລະ ຈາກໄປໂດຍບໍ່ອະທິບາຍຫຍັງເລີຍ. ຢ່າງຫຼາຍທີ່ສຸດ, ຄົນທີ່ຢູ່ພາຍໃນທຳມະສາລາກໍສົນທະນາເຖິງສິ່ງນີ້ໃນທ່າມກາງພວກເຂົາເອງ, ແຕ່ພຣະເຢຊູບໍ່ມີສ່ວນໃນສິ່ງນີ້. ພຣະເຈົ້າພຽງແຕ່ປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ ແລະ ບໍ່ມີຫຍັງທີ່ຈະຢູ່ເກີນ ແລະ ຢູ່ເໜືອສິ່ງນີ້ໄດ້. ບັດນີ້ຫຼາຍຄົນຕ້ອງການໃຫ້ເຮົາກ່າວຫຼາຍຂຶ້ນ ແລະ ເວົ້າຫຼາຍຂຶ້ນ, ຢ່າງໜ້ອຍກໍສອງສາມຊົ່ວໂມງຕໍ່ມື້. ຕາມທີ່ພວກເຈົ້າເຂົ້າໃຈ, ພຣະເຈົ້າເຊົາເປັນພຣະເຈົ້າ ນອກຈາກພຣະອົງຈະກ່າວ ແລະ ມີແຕ່ຜູ້ທີ່ກ່າວຈຶ່ງເປັນພຣະເຈົ້າໄດ້. ພວກເຈົ້າທຸກຄົນແມ່ນຕາບອດ! ສັດຮ້າຍທັງຫຼາຍເອີຍ! ພວກເຈົ້າທຸກຄົນລ້ວນເປັນສິ່ງໂງ່ຈ້າທີ່ບໍ່ມີຄວາມສຳນຶກ! ພວກເຈົ້າມີແນວຄວາມຄິດຫຼາຍເກີນໄປ! ການຮຽກຮ້ອງຂອງພວກເຈົ້າໄປໄກຫຼາຍໂພດ! ພວກເຈົ້າໄຮ້ມະນຸດສະຍະທຳ! ພວກເຈົ້າບໍ່ເຂົ້າໃຈສິ່ງທີ່ພຣະເຈົ້າເປັນແມ່ນແຕ່ໜ້ອຍດຽວ! ພວກເຈົ້າເຊື່ອວ່ານັກເວົ້າ ແລະ ນັກປາໄສທຸກຄົນເປັນພຣະເຈົ້າ ແລະ ໃຜກໍຕາມທີ່ເຕັມໃຈສະໜອງພຣະທຳໃຫ້ກັບພວກເຈົ້າແມ່ນພໍ່ຂອງພວກເຈົ້າ. ຈົ່ງບອກເຮົາໄດ້ບໍ່ ພວກເຈົ້າທຸກຄົນພ້ອມກັບລັກສະນະໃບໜ້າ "ທີ່ມີຮູບຊົງດີ" ແລະ ຮູບຮ່າງໜ້າຕາ "ທີ່ບໍ່ທຳມະດາ" ຍັງມີຄວາມສຳນຶກແມ່ນແຕ່ໜ້ອຍດຽວຢູ່ບໍ? ເຈົ້າຮູ້ຈັກດວງຕາເວັນໃນສະຫວັນຢູ່ບໍ! ພວກເຈົ້າແຕ່ລະຄົນເປັນຄືກັບເຈົ້າໜ້າທີ່ໆໂລພາ ແລະ ເສື່ອມຊາມ, ແລ້ວພວກເຈົ້າຈະເຫັນເຖິງຄວາມສຳນຶກໄດ້ແນວໃດ? ພວກເຈົ້າຈະສາມາດແຍກແຍະລະຫວ່າງຖືກ ແລະ ຜິດໄດ້ແນວໃດ? ເຮົາໄດ້ປະທານຫຼາຍຢ່າງໃຫ້ກັບພວກເຈົ້າ, ແຕ່ມີເທົ່າໃດຄົນໃນທ່າມກາງພວກເຈົ້າທີ່ໄດ້ໃຫ້ຄຸນຄ່າກັບສິ່ງນັ້ນແດ່? ຜູ້ໃດແດ່ທີ່ຄອບຄອງສິ່ງນັ້ນຢ່າງສົມບູນ? ພວກເຈົ້າບໍ່ຮູ້ຈັກວ່າຜູ້ໃດເປີດຫົນທາງທີ່ພວກເຈົ້າຍ່າງໃນມື້ນີ້, ແລ້ວພວກເຈົ້າກໍສືບຕໍ່

ຮຽກຮ້ອງຈາກເຮົາ, ຮຽກຮ້ອງສິ່ງທີ່ເປັນຕາໜ່າຍ ແລະ ບໍ່ສົມເຫດສົມຜົນຈາກເຮົາ. ພວກເຈົ້າບໍ່ໄດ້ໜ້າແດງຍ້ອນຄວາມອັບອາຍບໍ? ເຮົາບໍ່ໄດ້ເວົ້າເທົ່າທີ່ຄວນບໍ? ເຮົາບໍ່ໄດ້ເຮັດເທົ່າທີ່ຄວນບໍ? ຜູ້ໃດທ່າມກາງພວກເຈົ້າທີ່ສາມາດຖະໜຸຖະໜອມພຣະທຳຂອງເຮົາດັ່ງຊັບສົມບັດຢ່າງແທ້ຈິງແດ່? ພວກເຈົ້າປະຈົບປະແຈງເຮົາເມື່ອຢູ່ຕໍ່ໜ້າເຮົາ, ແຕ່ພວກເຈົ້າເວົ້າຕົວະ ແລະ ຫຼອກລວງເມື່ອເຈົ້າບໍ່ໄດ້ຢູ່ຕໍ່ໜ້າເຮົາ! ການກະທຳຂອງພວກເຈົ້າຊົ່ວຊ້າເກີນໄປ ແລະ ສິ່ງເຫຼົ່ານັ້ນກໍຕໍ່ຕ້ານເຮົາ! ເຮົາຮູ້ວ່າພວກເຈົ້າຮຽກຮ້ອງໃຫ້ເຮົາເວົ້າ ແລະ ປະຕິບັດພາລະກິດໂດຍບໍ່ໄດ້ມີເຫດຜົນອື່ນທີ່ຫຼາຍໄປກວ່າການເຮັດໃຫ້ພວກເຈົ້າເພີດເພີນຕາ ແລະ ຂະຫຍາຍຂອບເຂດຂອງພວກເຈົ້າ, ບໍ່ແມ່ນເພື່ອເຫັນແກ່ການປ່ຽນແປງຊີວິດຂອງພວກເຈົ້າ. ເຮົາໄດ້ເວົ້າກັບພວກເຈົ້າຫຼາຍຢ່າງ. ຊີວິດຂອງພວກເຈົ້າຄວນຖືກປ່ຽນແປງແຕ່ດົນແລ້ວ, ແລ້ວເປັນຫຍັງພວກເຈົ້າຈຶ່ງຍັງສືບຕໍ່ກັບໄປສູ່ສະພາວະເດີມຂອງພວກເຈົ້າແມ່ນແຕ່ໃນປັດຈຸບັນ? ເປັນໄປໄດ້ບໍວ່າຍ້ອນພຣະທຳຂອງເຮົາຖືກປຸ້ນຈາກພວກເຈົ້າ ແລະ ພວກເຈົ້າບໍ່ໄດ້ຮັບພຣະທຳເຫຼົ່ານັ້ນ? ເວົ້າຕາມຄວາມຈິງກໍຄື ເຮົາບໍ່ໄດ້ປາຖະໜາທີ່ຈະເວົ້າຫຍັງເພີ່ມເຕີມກັບຄົນເສື່ອມຊາມແບບພວກເຈົ້າ, ມັນຈະສູນເປົ່າ! ເຮົາບໍ່ໄດ້ປາຖະໜາທີ່ຈະເຮັດພາລະກິດທີ່ໄຮ້ປະໂຫຍດທີ່ສຸດ! ພວກເຈົ້າພຽງແຕ່ປາຖະໜາທີ່ຈະຂະຫຍາຍຂອບເຂດຂອງພວກເຈົ້າ ຫຼື ເຮັດໃຫ້ພວກເຈົ້າເພີດເພີນຕາ ແລະ ບໍ່ແມ່ນເພື່ອຮັບເອົາຊີວິດ! ພວກເຈົ້າທຸກຄົນກຳລັງຫຼອກລວງຕົນເອງ! ເຮົາຖາມພວກເຈົ້າແດ່ວ່າ ສິ່ງທີ່ເຮົາໄດ້ເວົ້າຢູ່ຕໍ່ໜ້າພວກເຈົ້ານີ້ ມີຫຍັງແດ່ທີ່ພວກເຈົ້າໄດ້ນຳເຂົ້າສູ່ການປະຕິບັດ? ສິ່ງທີ່ພວກເຈົ້າເຮັດກໍມີແຕ່ຫຼິ້ນກົນລວງເພື່ອລໍ້ລວງຄົນອື່ນ! ເຮົາກຽດຊັງຄົນທ່າມກາງພວກເຈົ້າທີ່ມັກເບິ່ງຄືກັບຜູ້ສັງເກດການ ແລະ ເຮົາພົບວ່າຄວາມຢາກຮູ້ຢາກເຫັນຂອງພວກເຈົ້ານັ້ນເປັນຕາລັງກຽດຫຼາຍ. ຖ້າພວກເຈົ້າບໍ່ໄດ້ຢູ່ທີ່ນີ້ເພື່ອສະແຫວງຫາຫົນທາງທີ່ແທ້ຈິງ ຫຼື ກະຫາຍຫາຄວາມຈິງ, ແລ້ວພວກເຈົ້າກໍເປັນເປົ້າໝາຍຂອງຄວາມກຽດຊັງຂອງເຮົາ! ເຮົາຮູ້ຈັກວ່າພວກເຈົ້າຟັງເຮົາເວົ້າກໍພຽງແຕ່ເພື່ອພໍໃຈຄວາມຢາກຮູ້ຢາກເຫັນຂອງພວກເຈົ້າ ຫຼື ເພື່ອພໍໃຈຄວາມປາຖະໜາທີ່ໂລພາຂອງພວກເຈົ້າຢ່າງໃດຢ່າງໜຶ່ງ. ພວກເຈົ້າບໍ່ມີຄວາມຄິດທີ່ຈະສະແຫວງຫາການມີຢູ່ຂອງຄວາມຈິງ ຫຼື ຄົ້ນຫາເສັ້ນທາງທີ່ຖືກຕ້ອງເພື່ອເຂົ້າສູ່ຊີວິດ; ຄວາມຮຽກຮ້ອງເຫຼົ່ານີ້ບໍ່ໄດ້ມີຢູ່ຈິງທ່າມກາງພວກເຈົ້າເລີຍ. ສິ່ງທີ່ພວກເຈົ້າເຮັດກໍມີພຽງແຕ່ປະຕິບັດຕໍ່ພຣະເຈົ້າຄືກັບເຄື່ອງຫຼິ້ນທີ່ພວກເຈົ້າສຶກສາ ແລະ ນັບຖື. ພວກເຈົ້າມີຄວາມຮ້ອນຮົນໜ້ອຍເກີນໄປທີ່ຈະສະແຫວງຫາຊີວິດ, ແຕ່ມີຄວາມປາຖະໜາຢາກຮູ້ຢາກເຫັນຫຼາຍທີ່ສຸດ! ການອະທິບາຍຫົນທາງແຫ່ງຊີວິດໃຫ້ກັບຄົນປະເພດດັ່ງກ່າວກໍເທົ່າກັບເວົ້າກັບລົມ; ເຮົາອາດບໍ່ເວົ້າຫຍັງເລີຍດີກວ່າ! ໃຫ້ເຮົາບອກພວກເຈົ້າວ່າ ຖ້າພວກເຈົ້າພຽງແຕ່ເບິ່ງເພື່ອເຕີມເຕັມຄວາມວ່າງເປົ່າທີ່ຢູ່ພາຍໃນຫົວໃຈຂອງພວກເຈົ້າ, ແລ້ວມັນກໍຈະເປັນການດີທີ່ສຸດຖ້າພວກເຈົ້າບໍ່ຕ້ອງມາຫາເຮົາ! ພວກເຈົ້າຄວນໃຫ້ຄວາມສຳຄັນໃນການຮັບເອົາຊີວິດ! ຢ່າຫຼອກລວງຕົນເອງ! ມັນຈະເປັນການດີທີ່ສຸດຖ້າພວກເຈົ້າຮັບເອົາຄວາມຢາກຮູ້ຢາກເຫັນຂອງພວກເຈົ້າເປັນພື້ນຖານສຳລັບການສະແຫວງຫາຊີວິດຂອງພວກເຈົ້າ ຫຼື ໃຊ້ມັນເພື່ອເປັນຂໍ້ອ້າງເພື່ອຂໍໃຫ້ເຮົາເວົ້າກັບພວກເຈົ້າ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນອຸບາຍທີ່ພວກເຈົ້າຊຳນານຫຼາຍ! ເຮົາຂໍຖາມເຈົ້າອີກວ່າ ໃນບັນດາສິ່ງທີ່ເຮົາຮຽກຮ້ອງໃຫ້ເຈົ້າເຂົ້າສູ່ນັ້ນ ມີຫຼາຍສໍ່າໃດທີ່

ເຈົ້າໄດ້ເຂົ້າສູ່ຢ່າງແທ້ຈິງ? ເຈົ້າໄດ້ເຂົ້າໃຈທຸກສິ່ງທີ່ເຮົາເວົ້າກັບເຈົ້າຢູ່ບໍ? ເຈົ້າໄດ້ນຳທຸກສິ່ງທີ່ເຮົາບອກກັບເຈົ້າເຂົ້າສູ່ການປະຕິບັດແລ້ວບໍ?

ພາລະກິດຂອງແຕ່ລະຍຸກແມ່ນເລີ່ມຕົ້ນໂດຍພຣະເຈົ້າເອງ, ແຕ່ເຈົ້າຄວນຮູ້ວ່າ ບໍ່ວ່າຫົນທາງໃດກໍຕາມທີ່ພຣະເຈົ້າປະຕິບັດພາລະກິດ, ພຣະອົງບໍ່ໄດ້ມາເພື່ອເລີ່ມຕົ້ນການເຄື່ອນໄຫວ ຫຼື ຈັດການປະຊຸມທີ່ພິເສດ ຫຼື ກໍ່ຕັ້ງອົງກອນປະເພດໃດໜຶ່ງໃນນາມຂອງພວກເຈົ້າ. ພຣະອົງພຽງແຕ່ມາເພື່ອປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ. ພາລະກິດຂອງພຣະອົງບໍ່ໄດ້ເສຍຫາຍຍ້ອນຂໍ້ຈຳກັດຂອງຄົນໃດຄົນໜຶ່ງ. ພຣະອົງປະຕິບັດພາລະກິດຂອງພຣະອົງແບບໃດກໍໄດ້ຕາມທີ່ພຣະອົງປາຖະໜາ; ບໍ່ວ່າມະນຸດຄິດ ຫຼື ຮູ້ຫຍັງກ່ຽວກັບພາລະກິດນັ້ນກໍຕາມ, ພຣະອົງກໍພຽງແຕ່ສົນໃຈໃນການປະຕິບັດພາລະກິດຂອງພຣະອົງເທົ່ານັ້ນ. ຕັ້ງແຕ່ການສ້າງໂລກຈົນເຖິງປັດຈຸບັນ, ໄດ້ມີພາລະກິດມາແລ້ວສາມຂັ້ນຕອນ; ຕັ້ງແຕ່ພຣະເຢໂຮວາຈົນເຖິງພຣະເຢຊູ ແລະ ຕັ້ງແຕ່ຍຸກແຫ່ງພຣະບັນຍັດຈົນເຖິງຍຸກແຫ່ງພຣະຄຸນ, ພຣະເຈົ້າບໍ່ເຄີຍຈັດປະຊຸມພິເສດໃຫ້ກັບມະນຸດຈັກເທື່ອ ຫຼື ພຣະອົງບໍ່ເຄີຍຮຽກໂຮມມະນຸດຊາດທັງປວງເພື່ອຈັດປະຊຸມພິເສດໃນການປະຕິບັດພາລະກິດທົ່ວໂລກ ແລະ ຂະຫຍາຍຂອບເຂດຂອງພາລະກິດຂອງພຣະອົງ. ສິ່ງທີ່ພຣະອົງເຮັດແມ່ນພຽງແຕ່ປະຕິບັດພາລະກິດເພື່ອເລີ່ມຕົ້ນຍຸກທັງໝົດໃນເວລາທີ່ເໝາະສົມ ແລະ ໃນສະຖານທີ່ໆເໝາະສົມ, ເລີ່ມຕົ້ນຍຸກ ແລະ ນຳພາມະນຸດຊາດກ່ຽວກັບວິທີການການດຳລົງຊີວິດຂອງພວກເຂົາ. ການຊຸມນຸມພິເສດແມ່ນການໂຮມຕົວຂອງມະນຸດ; ການຮຽກໂຮມຜູ້ຄົນຮ່ວມກັນເພື່ອສະເຫຼີມສະຫຼອງມື້ພັກແມ່ນພາລະກິດຂອງມະນຸດ. ພຣະເຈົ້າບໍ່ມີມື້ພັກ ແລະ ຍິ່ງໄປກວ່ານັ້ນ ພຣະອົງພົບວ່າສິ່ງເຫຼົ່ານັ້ນເປັນສິ່ງທີ່ເປັນຕາລັງກຽດ; ພຣະອົງບໍ່ຮຽກໂຮມການປະຊຸມພິເສດ ແລະ ຍິ່ງໄປກວ່ານັ້ນ ພຣະອົງພົບວ່າສິ່ງເຫຼົ່ານັ້ນເປັນຕາລັງກຽດ. ບັດນີ້ ເຈົ້າຄວນເຂົ້າໃຈຢ່າງແທ້ຈິງວ່າແມ່ນຫຍັງຄືພາລະກິດທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດປະຕິບັດ!

# ຄວາມເລິກລັບແຫ່ງການບັງເກີດເປັນມະນຸດ (4)

ພວກເຈົ້າຄວນຮູ້ຈັກເລື່ອງລາວທີ່ຢູ່ເບື້ອງຫຼັງພຣະຄຳພີ ແລະ ກ່ຽວກັບການສ້າງພຣະຄຳພີ. ຄວາມຮູ້ນີ້ບໍ່ແມ່ນເປັນຂອງຄົນທີ່ບໍ່ຍອມຮັບເອົາພາລະກິດໃໝ່ຂອງພຣະເຈົ້າ. ພວກເຂົາບໍ່ຮູ້ຈັກ. ຖ້າເຈົ້າເວົ້າກ່ຽວກັບແກ່ນແທ້ໃນເລື່ອງນີ້ຕໍ່ພວກເຂົາຢ່າງຊັດເຈນ, ພວກເຂົາກໍຈະບໍ່ເຂັ້ມງວດກ່ຽວກັບພຣະຄຳພີກັບເຈົ້າອີກຕໍ່ໄປ. ພວກເຂົາຂຸດຄົ້ນໃນສິ່ງທີ່ຖືກທຳນາຍໄວ້ແລ້ວຢູ່ຕະຫຼອດເວລາ: ຂໍ້ຄວາມນີ້ໄດ້ເກີດຂຶ້ນແລ້ວບໍ? ຂໍ້ຄວາມນັ້ນໄດ້ເກີດຂຶ້ນແລ້ວບໍ? ການທີ່ພວກເຂົາຍອມຮັບຂ່າວປະເສີດແມ່ນອີງຕາມພຣະຄຳພີ; ແລະ ພວກເຂົາເທດສະໜາຂ່າວປະເສີດຕາມພຣະຄຳພີ. ຄວາມເຊື່ອທີ່ພວກເຂົາມີໃນພຣະເຈົ້າແມ່ນນອນຢູ່ໃນພຣະທຳຂອງພຣະຄຳພີ; ຫາກປາສະຈາກພຣະຄຳພີ, ພວກເຂົາຈະບໍ່ເຊື່ອໃນພຣະເຈົ້າ. ນີ້ແມ່ນລັກສະນະທີ່ພວກເຂົາດຳລົງຊີວິດຢູ່, ວິເຄາະພຣະຄຳພີແບບບໍ່ມີເຫດຜົນ. ເມື່ອພວກເຂົາມາຂຸດຄົ້ນເລື່ອງພຣະຄຳພີອີກຄັ້ງ ແລະ ຂໍໃຫ້ເຈົ້າອະທິບາຍ, ເຈົ້າເວົ້າວ່າ “ກ່ອນອື່ນພວກເຮົາບໍ່ຕ້ອງສຳຫຼວດຂໍ້ຄວາມແຕ່ລະຂໍ້. ກົງກັນຂ້າມ ຂໍໃຫ້ພວກເຮົາຫຼຽວເບິ່ງວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ. ໃຫ້ພວກເຮົາຮັບເອົາເສັ້ນທາງທີ່ພວກເຮົາຍ່າງ ແລະ ປຽບທຽບເສັ້ນທາງນັ້ນກັບຄວາມຈິງເພື່ອເບິ່ງວ່າເສັ້ນທາງແມ່ນພາລະກິດຂອງພຣະວິນຍານບໍລິສຸດຢ່າງທີ່ຈິງ ຫຼື ບໍ່ ແລະ ໃຊ້ພາລະກິດຂອງພຣະວິນຍານບໍລິສຸດເພື່ອກວດເບິ່ງວ່າເສັ້ນທາງດັ່ງກ່າວຖືກຕ້ອງ ຫຼື ບໍ່. ແຕ່ສຳລັບຂໍ້ຄວາມນີ້ ຫຼື ຂໍ້ຄວາມນັ້ນໄດ້ເກີດຂຶ້ນຕາມການທຳນາຍ ຫຼື ບໍ່ນັ້ນ, ພວກເຮົາຜູ້ເປັນມະນຸດບໍ່ຄວນສອດຮູ້ໃນສິ່ງນັ້ນ. ກົງກັນຂ້າມ ມັນຈະດີກວ່າຖ້າພວກເຮົາພາກັນເວົ້າເຖິງພາລະກິດຂອງພຣະວິນຍານບໍລິສຸດ ແລະ ພາລະກິດຫຼ້າສຸດທີ່ພຣະເຈົ້າກຳລັງປະຕິບັດ”. ຄຳທຳນາຍທີ່ຢູ່ໃນພຣະຄຳພີແມ່ນພຣະທຳຂອງພຣະເຈົ້າທີ່ຖ່າຍທອດໃນເວລານັ້ນ ໂດຍຜູ້ປະກາດພຣະທຳ ແລະ ພຣະທຳທີ່ຖືກຂຽນໂດຍຄົນທີ່ພຣະເຈົ້າໃຊ້, ຮັບເອົາຄວາມປາຖະໜາ; ມີພຽງແຕ່ພຣະເຈົ້າເອງເທົ່ານັ້ນທີ່ສາມາດອະທິບາຍພຣະທຳເຫຼົ່ານັ້ນໄດ້, ມີພຽງແຕ່ພຣະວິນຍານບໍລິສຸດເທົ່ານັ້ນທີ່ສາມາດເຮັດໃຫ້ຄວາມໝາຍຂອງພຣະທຳເຫຼົ່ານັ້ນເປັນທີ່ຮູ້ຈັກ ແລະ ມີພຽງແຕ່ພຣະເຈົ້າເອງເທົ່ານັ້ນທີ່ສາມາດທຳລາຍຕາປະທັບທັງເຈັດ ແລະ ມາຍໜັງສືມ້ວນໄດ້. ເຈົ້າເວົ້າວ່າ: “ເຈົ້າບໍ່ແມ່ນພຣະເຈົ້າ ແລະ ເຮົາກໍບໍ່ແມ່ນເຊັ່ນກັນ, ສະນັ້ນ ຜູ້ໃດກ້າອະທິບາຍພຣະທຳຂອງພຣະເຈົ້າໄດ້ຢ່າງງ່າຍດາຍແດ່? ເຈົ້າກ້າອະທິບາຍພຣະທຳເຫຼົ່ານັ້ນບໍ? ເຖິງແມ່ນຜູ້ປະກາດພຣະທຳ ເຢເຣມີຢາ, ໂຢຮັນ ແລະ ເອລີຢາຕ້ອງກັບຄືນມາ, ພວກເຂົາກໍຈະບໍ່ກ້າທົດລອງ ແລະ ອະທິບາຍພຣະທຳເຫຼົ່ານັ້ນ, ຍ້ອນພວກເຂົາບໍ່ແມ່ນພຣະເມສານ້ອຍ. ມີພຽງແຕ່ພຣະເມສານ້ອຍເທົ່ານັ້ນທີ່ສາມາດທຳລາຍຕາປະທັບທັງເຈັດ ແລະ ມາຍໜັງສືມ້ວນອອກໄດ້ ແລະ ບໍ່ມີຜູ້ໃດສາມາດອະທິບາຍພຣະທຳຂອງພຣະອົງໄດ້. ເຮົາບໍ່ກ້າທີ່ຈະຍາດແຍ້ງເອົາພຣະນາມຂອງພຣະເຈົ້າ, ແລ້ວແຮງໄກທີ່ເຮົາຈະພະຍາຍາມອະທິບາຍພຣະທຳຂອງພຣະເຈົ້າ. ເຮົາພຽງແຕ່ສາມາດເປັນຄົນທີ່ເຊື່ອຟັງພຣະເຈົ້າເທົ່ານັ້ນ. ເຈົ້າເປັນພຣະເຈົ້າບໍ? ບໍ່ມີສິ່ງຖືກສ້າງໃດໆຂອງພຣະເຈົ້າທີ່ຈະກ້າມາຍໜັງສືມ້ວນນັ້ນອອກໄດ້ ຫຼື ອະທິບາຍພຣະທຳເຫຼົ່ານັ້ນໄດ້ ແລະ ສະນັ້ນ ເຮົາຈຶ່ງບໍ່ກ້າອະທິບາຍພຣະທຳເຫຼົ່ານັ້ນເຊັ່ນກັນ. ເຈົ້າບໍ່

ຄວນພະຍາຍາມອະທິບາຍພຣະທຳເຫຼົ່ານັ້ນ. ທຸກຄົນບໍ່ຄວນພະຍາຍາມອະທິບາຍມັນ. ພວກເຮົາຄວນເວົ້າກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ; ນີ້ແມ່ນສິ່ງທີ່ມະນຸດສາມາດເຮັດໄດ້ຫຼາຍທີ່ສຸດ. ເຮົາຮູ້ຈັກກ່ຽວກັບພາລະກິດຂອງພຣະເຢໂຮວາ ແລະ ພຣະເຢຊູເລັກນ້ອຍ, ແຕ່ໃນເມື່ອເຮົາບໍ່ມີປະສົບການສ່ວນຕົວກ່ຽວກັບພາລະກິດດັ່ງກ່າວ, ເຮົາພຽງແຕ່ສາມາດເວົ້າເຖິງພາລະກິດດັ່ງກ່າວໃນຂອບເຂດຈຳກັດເທົ່ານັ້ນ. ສຳລັບຄວາມໝາຍຂອງພຣະທຳທີ່ເອຊາຢາ ຫຼື ພຣະເຢຊູກ່າວໃນເວລາຂອງພວກເຂົາ, ເຮົາຈະບໍ່ຂໍອະທິບາຍ. ເຮົາບໍ່ໄດ້ສຶກສາພຣະຄຳພີ; ກົງກັນຂ້າມ ເຮົາຕິດຕາມພາລະກິດໃນປັດຈຸບັນຂອງພຣະເຈົ້າ. ແທ້ຈິງແລ້ວ ເຈົ້າຖືພຣະຄຳພີເປັນພຽງໜັງສືມ້ວນນ້ອຍໆ, ແຕ່ວ່າມັນບໍ່ແມ່ນສິ່ງທີ່ມີພຽງພຣະເມສານ້ອຍສາມາດເປີດໄດ້ບໍ? ນອກຈາກພຣະເມສານ້ອຍແລ້ວ ຜູ້ໃດສາມາດເຮັດໄດ້ແດ່? ເຈົ້າບໍ່ແມ່ນພຣະເມສານ້ອຍ ແລະ ແຮງໄກທີ່ເຮົາຈະກ້າອ້າງວ່າເປັນພຣະເຈົ້າເອງ, ສະນັ້ນ ໃຫ້ພວກເຮົາບໍ່ວິເຄາະພຣະຄຳພີ ຫຼື ວິພາກວິຈານພຣະຄຳພີຢ່າງບໍ່ມີເຫດຜົນ. ມັນຈະເປັນການດີທີ່ສຸດທີ່ເຮົາມາສົນທະນາກ່ຽວກັບພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດ ນັ້ນກໍຄື ພາລະກິດໃນປັດຈຸບັນທີ່ພຣະເຈົ້າເອງປະຕິບັດ. ໃຫ້ພວກເຮົາເບິ່ງວ່າ ແມ່ນຫຍັງຄືຫຼັກການທີ່ພຣະເຈົ້າປະຕິບັດພາລະກິດ ແລະ ແມ່ນຫຍັງຄືແກ່ນແທ້ແຫ່ງພາລະກິດຂອງພຣະອົງ, ໃຊ້ສິ່ງເຫຼົ່ານີ້ເພື່ອພິສູດວ່າ ເສັ້ນທາງທີ່ພວກເຮົາຍ່າງໃນປັດຈຸບັນນີ້ຖືກຕ້ອງ ຫຼື ບໍ່ ແລະ ໃນລັກສະນະນີ້ ຈຶ່ງຈະໝັ້ນໃຈກ່ຽວກັບສິ່ງນັ້ນ". ຖ້າພວກເຈົ້າປາຖະໜາທີ່ຈະເທດສະໜາຂ່າວປະເສີດ ໂດຍສະເພາະກັບຜູ້ຄົນທີ່ຢູ່ໃນໂລກແຫ່ງສາສະໜາ, ພວກເຈົ້າຕ້ອງເຂົ້າໃຈພຣະຄຳພີ ແລະ ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບເລື່ອງລາວພາຍໃນ; ບໍ່ດັ່ງນັ້ນຈະບໍ່ມີທາງໃຫ້ເຈົ້າເທດສະໜາຂ່າວປະເສີດໄດ້. ຫຼັງຈາກທີ່ເຈົ້າໄດ້ເຂົ້າໃຈພາບລວມຢ່າງເລິກເຊິ່ງແລ້ວ ແລະ ເຊົາວິພາກວິຈານຂໍ້ພຣະທຳທີ່ຕາຍແລ້ວໃນພຣະຄຳພີແບບບໍ່ໃຫ້ຄວາມສຳຄັນ, ແຕ່ພຽງເວົ້າເຖິງພາລະກິດຂອງພຣະເຈົ້າ ແລະ ຄວາມຈິງແຫ່ງຊີວິດ, ເຈົ້າກໍຈະສາມາດຮັບເອົາຄົນທີ່ສະແຫວງຫາດ້ວຍຫົວໃຈທີ່ແທ້ຈິງ.

ພາລະກິດຂອງພຣະເຢໂຮວາ ພຣະບັນຍັດທີ່ພຣະອົງສ້າງຂຶ້ນ ແລະ ຫຼັກການທີ່ພຣະອົງຊີ້ນຳມະນຸດໃນການດຳລົງຊີວິດຂອງພວກເຂົາ; ເນື້ອໃນຂອງພາລະກິດທີ່ພຣະອົງປະຕິບັດໃນຍຸກແຫ່ງພຣະບັນຍັດ, ຄວາມໝາຍທີ່ພຣະອົງສ້າງພຣະບັນຍັດ, ຄວາມສຳຄັນຂອງພາລະກິດຂອງພຣະອົງຕໍ່ຍຸກແຫ່ງພຣະຄຸນ ແລະ ພາລະກິດທີ່ພຣະອົງປະຕິບັດໃນຍຸກສຸດທ້າຍນີ້: ສິ່ງເຫຼົ່ານີ້ເປັນສິ່ງທີ່ພວກເຈົ້າຄວນເຂົ້າໃຈ. ຂັ້ນຕອນທຳອິດແມ່ນພາລະກິດຂອງຍຸກແຫ່ງພຣະບັນຍັດ. ຂັ້ນຕອນທີສອງແມ່ນພາລະກິດຂອງຍຸກແຫ່ງພຣະຄຸນ ແລະ ຂັ້ນຕອນທີ່ສາມແມ່ນພາລະກິດຂອງຍຸກສຸດທ້າຍ. ພວກເຈົ້າຕ້ອງຊັດເຈນກ່ຽວກັບຂັ້ນຕອນຂອງພາລະກິດເຫຼົ່ານີ້ຂອງພຣະເຈົ້າ. ຕັ້ງແຕ່ການເລີ່ມຕົ້ນຈົນເຖິງຈຸດສິ້ນສຸດ, ທັງໝົດແມ່ນມີສາມຂັ້ນຕອນ. ແມ່ນຫຍັງຄືແກ່ນແທ້ຂອງແຕ່ລະຂັ້ນຕອນຂອງພາລະກິດ? ມີຈັກຂັ້ນຕອນທີ່ຖືກປະຕິບັດໃນພາລະກິດຂອງແຜນການຄຸ້ມຄອງຫົກພັນປີ? ຂັ້ນຕອນເຫຼົ່ານີ້ຈະຖືກປະຕິບັດແນວໃດ ແລະ ເປັນຫຍັງແຕ່ລະຂັ້ນຕອນຈຶ່ງຖືກປະຕິບັດໃນລັກສະນະສະເພາະຂອງມັນ? ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຄຳຖາມທີ່ສຳຄັນ. ພາລະກິດຂອງແຕ່ລະຍຸກມີຄຸນຄ່າໃນການເປັນຕົວແທນຂອງຍຸກນັ້ນໆ.

ພຣະເຢໂຮວາປະຕິບັດພາລະກິດຫຍັງ? ເປັນຫຍັງພຣະອົງຈຶ່ງປະຕິບັດພາລະກິດໃນລັກສະນະນັ້ນ? ເປັນຫຍັງພຣະອົງຈຶ່ງຖືກເອີ້ນວ່າພຣະເຢໂຮວາ? ເຊັ່ນດຽວກັນ ພຣະເຢຊູປະຕິບັດພາລະກິດຫຍັງໃນຍຸກແຫ່ງພຣະຄຸນ ແລະ ພຣະອົງປະຕິບັດພາລະກິດດັ່ງກ່າວນັ້ນໃນລັກສະນະໃດ? ມີອຸປະນິໄສຂອງພຣະເຈົ້າໃນດ້ານໃດແດ່ທີ່ສະແດງອອກໃນແຕ່ລະຂັ້ນຕອນຂອງພາລະກິດ ແລະ ໃນແຕ່ລະຍຸກ? ດ້ານໃດຂອງອຸປະນິໄສຂອງພຣະອົງທີ່ສະແດງອອກມາໃນຍຸກແຫ່ງພຣະບັນຍັດ? ແລ້ວດ້ານໃດສະແດງອອກໃນຍຸກແຫ່ງພຣະຄຸນ? ແລ້ວໃນຍຸກສຸດທ້າຍເດ? ສິ່ງເຫຼົ່ານີ້ແມ່ນຄຳຖາມຈຳເປັນທີ່ພວກເຈົ້າຕ້ອງເຂົ້າໃຈຢ່າງຈະແຈ້ງ. ອຸປະນິໄສທັງໝົດຂອງພຣະເຈົ້າແມ່ນຖືກເປີດເຜີຍອອກຕະຫຼອດແຜນການຄຸ້ມຄອງຫົກພັນປີຂອງພຣະອົງ. ມັນບໍ່ໄດ້ຖືກເປີດເຜີຍພຽງແຕ່ໃນຍຸກແຫ່ງພຣະຄຸນ ຫຼື ຍຸກແຫ່ງພຣະບັນຍັດເທົ່ານັ້ນ, ແລ້ວແຮງໄກທີ່ຈະຖືກເປີດເຜີຍພຽງແຕ່ຢູ່ໃນຍຸກສຸດທ້າຍເທົ່ານັ້ນ. ພາລະກິດທີ່ຖືກປະຕິບັດໃນຍຸກສຸດທ້າຍແມ່ນເປັນຕົວແທນໃຫ້ກັບການພິພາກສາ, ຄວາມໂກດຮ້າຍ ແລະ ການຂ້ຽນຕີ. ພາລະກິດທີ່ປະຕິບັດໃນຍຸກສຸດທ້າຍບໍ່ສາມາດແທນ ພາລະກິດຂອງຍຸກແຫ່ງພຣະບັນຍັດໄດ້ ຫຼື ແທນຍຸກແຫ່ງພຣະຄຸນໄດ້. ເຖິງຢ່າງໃດກໍຕາມ ສາມຂັ້ນຕອນເຊື່ອມໂຍງກັນເປັນອັນໜຶ່ງອັນດຽວ ແລະ ຂັ້ນຕອນທັງໝົດແມ່ນພາລະກິດຂອງພຣະເຈົ້າອົງດຽວ. ຕາມທຳມະຊາດແລ້ວ ການປະຕິບັດພາລະກິດນີ້ຖືກແບ່ງອອກເປັນຍຸກທີ່ແຕກຕ່າງກັນ. ພາລະກິດທີ່ສຳເລັດໃນຍຸກສຸດທ້າຍເປັນພາລະກິດທີ່ນຳທຸກສິ່ງໄປສູ່ການສິ້ນສຸດ; ພາລະກິດທີ່ສຳເລັດໃນຍຸກແຫ່ງພຣະບັນຍັດແມ່ນພາລະກິດແຫ່ງການເລີ່ມຕົ້ນ ແລະ ພາລະກິດທີ່ສຳເລັດໃນຍຸກແຫ່ງພຣະຄຸນແມ່ນພາລະກິດແຫ່ງການໄຖ່ບາບ. ສຳລັບນິມິດຂອງພາລະກິດທີ່ຢູ່ໃນແຜນການຄຸ້ມຄອງຫົກພັນປີນີ້, ບໍ່ມີຜູ້ໃດສາມາດຮັບເອົາຄວາມຮູ້ ຫຼື ຄວາມເຂົ້າໃຈ ແລະ ນິມິດເຫຼົ່ານີ້ກໍຍັງເປັນປິດສະໜາຢູ່. ໃນຍຸກສຸດທ້າຍ ມີພຽງພາລະກິດຂອງພຣະທຳເທົ່ານັ້ນທີ່ຖືກປະຕິບັດເພື່ອນຳໄປສູ່ຍຸກແຫ່ງອານາຈັກ, ແຕ່ຍຸກສຸດທ້າຍບໍ່ແມ່ນຕົວແທນຂອງຍຸກທັງໝົດ. ຍຸກສຸດທ້າຍກໍເປັນຍຸກສຸດທ້າຍ ແລະ ຍຸກແຫ່ງອານາຈັກກໍຄືຍຸກແຫ່ງອານາຈັກ ເຊິ່ງບໍ່ແມ່ນຕົວແທນຂອງຍຸກແຫ່ງພຣະຄຸນ ຫຼື ຍຸກແຫ່ງພຣະບັນຍັດ. ນັ້ນຄືຄວາມຈິງ, ໃນລະຫວ່າງຍຸກສຸດທ້າຍ ພາລະກິດທັງໝົດໃນແຜນການຄຸ້ມຄອງຫົກພັນປີແມ່ນຖືກເປີດເຜີຍໃຫ້ພວກເຈົ້າເຫັນ. ນີ້ແມ່ນການເປີດເຜີຍເຖິງຄວາມລຶກລັບ. ຄວາມເລິກລັບປະເພດນີ້ແມ່ນສິ່ງທີ່ບໍ່ມີມະນຸດຄົນໃດສາມາດເປີດເຜີຍໄດ້. ບໍ່ວ່າຄວາມເຂົ້າໃຈຂອງມະນຸດກ່ຽວກັບພຣະຄຳພີຈະຍິ່ງໃຫຍ່ສໍ່າໃດ, ມັນກໍຍັງເປັນພຽງຄຳເວົ້າເທົ່ານັ້ນ, ຍ້ອນມະນຸດບໍ່ເຂົ້າໃຈແກ່ນແທ້ຂອງພຣະຄຳພີ. ໃນການອ່ານພຣະຄຳພີ, ມະນຸດອາດເຂົ້າໃຈຄວາມຈິງບາງຢ່າງ, ອະທິບາຍພຣະທຳບາງຂໍ້ ຫຼື ວິເຄາະຂໍ້ຄວາມບາງຂໍ້ ແລະ ບາງບົດທີ່ໂດດເດັ່ນພຽງເລັກນ້ອຍ, ແຕ່ເຂົາຈະບໍ່ສາມາດແກະຄວາມໝາຍທີ່ຢູ່ພາຍໃນພຣະທຳເຫຼົ່ານັ້ນ, ຍ້ອນສິ່ງທີ່ມະນຸດເຫັນແມ່ນເປັນພຽງພຣະທຳທີ່ຕາຍແລ້ວ, ບໍ່ແມ່ນເຫດການກ່ຽວກັບພາລະກິດຂອງພຣະເຢໂຮວາ ແລະ ຂອງພຣະເຢຊູ ແລະ ມະນຸດບໍ່ມີທາງໄຂຄວາມເລິກລັບຂອງພາລະກິດນີ້ໄດ້. ສະນັ້ນ ຄວາມເລິກລັບຂອງແຜນການຄຸ້ມຄອງຫົກພັນປີຈຶ່ງເປັນຄວາມເລິກລັບທີ່ຍິ່ງໃຫຍ່ທີ່ສຸດ, ເປັນຄວາມລີ້ລັບທີ່ສຸດ ແລະ ມະນຸດບໍ່ສາມາດຢັ່ງເຖິງໄດ້ທັງໝົດ. ບໍ່ມີໃຜສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າໂດຍກົງ, ນອກຈາກ

ພຣະອົງເອງຈະອະທິບາຍ ແລະ ເປີດເຜີຍສິ່ງນັ້ນໃຫ້ກັບມະນຸດ; ບໍ່ດັ່ງນັ້ນ ສິ່ງເຫຼົ່ານີ້ຈະຍັງເປັນປິດສະໜາຕໍ່ມະນຸດຕະຫຼອດໄປ, ເປັນຄວາມເລິກລັບທີ່ຖືກປົກປິດໄວ້ຕະຫຼອດໄປ. ບໍ່ຕ້ອງຫ່ວງສຳລັບຄົນທີ່ຢູ່ໃນໂລກສາດສະໜາ; ຖ້າພວກເຈົ້າບໍ່ໄດ້ຮັບຮູ້ໃນມື້ນີ້, ພວກເຈົ້າກໍຈະບໍ່ເຂົ້າໃຈມັນເຊັ່ນກັນ. ພາລະກິດຫົກພັນປີນີ້ຍິ່ງເລິກລັບຫຼາຍກວ່າຄຳທຳນາຍທັງໝົດຂອງຜູ້ປະກາດພຣະທຳ. ມັນເປັນຄວາມເລິກລັບທີ່ຍິ່ງໃຫຍ່ທີ່ສຸດຕັ້ງແຕ່ການເນລະມິດສ້າງຈົນເຖິງປັດຈຸບັນ ແລະ ບໍ່ມີໃຜທ່າມກາງຜູ້ປະກາດພຣະທຳທົ່ວຍຸກຕ່າງໆສາມາດຢັ່ງເຖິງຄວາມເລິກລັບນັ້ນໄດ້, ຍ້ອນຄວາມເລິກລັບນີ້ແມ່ນຈະຖືກເປີດເຜີຍອອກໃນຍຸກສຸດທ້າຍເທົ່ານັ້ນ ແລະ ບໍ່ເຄີຍຖືກເປີດເຜີຍມາກ່ອນ. ຖ້າພວກເຈົ້າສາມາດເຂົ້າໃຈຄວາມເລິກລັບນີ້ໄດ້ ແລະ ຖ້າພວກເຈົ້າສາມາດຮັບເອົາຄວາມເລິກລັບນີ້ໄດ້ທັງໝົດ, ແລ້ວບຸກຄົນໃນສາສະໜາທຸກຄົນກໍຈະຖືກເອົາຊະນະໂດຍຄວາມເລິກລັບນີ້. ມີພຽງແຕ່ສິ່ງນີ້ເທົ່ານັ້ນທີ່ເປັນນິມິດທີ່ຍິ່ງໃຫຍ່ທີ່ສຸດ; ມັນເປັນສິ່ງທີ່ມະນຸດປາຖະໜາຢາກເຂົ້າໃຈຫຼາຍທີ່ສຸດ ແຕ່ມັນກໍເປັນສິ່ງທີ່ບໍ່ຈະແຈ້ງສຳລັບເຂົາຫຼາຍທີ່ສຸດ. ເມື່ອພວກເຈົ້າຢູ່ໃນຍຸກແຫ່ງພຣະຄຸນ, ພວກເຈົ້າບໍ່ເຂົ້າໃຈວ່າພຣະເຢຊູປະຕິບັດພາລະກິດຫຍັງ ຫຼື ພຣະເຢໂຮວາປະຕິບັດພາລະກິດກ່ຽວກັບຫຍັງ. ຜູ້ຄົນບໍ່ເຂົ້າໃຈວ່າເປັນຫຍັງພຣະເຢໂຮວາຈຶ່ງກຳນົດກົດບັນຍັດ, ເປັນຫຍັງພຣະອົງຈຶ່ງຂໍໃຫ້ປວງຊົນຮັກສາກົດບັນຍັດ ຫຼື ເປັນຫຍັງພຣະວິຫານຈຶ່ງຖືກສ້າງຂຶ້ນ ແລະ ແຮງໄກທີ່ຜູ້ຄົນຈະເຂົ້າໃຈວ່າ ເປັນຫຍັງຊາວອິດສະຣາເອນຈຶ່ງຖືກນຳພາຈາກອີຢິບໄປສູ່ຖິ່ນແຫ້ງແລ້ງກັນດານ ແລະ ຫຼັງຈາກນັ້ນກໍໄປສູ່ການາອານ. ຈົນເຖິງປັດຈຸບັນ ບັນຫາເຫຼົ່ານີ້ຈຶ່ງໄດ້ຖືກເປີດເຜີຍອອກ.

ພາລະກິດໃນຍຸກສຸດທ້າຍເປັນຂັ້ນຕອນສຸດທ້າຍຂອງສາມຂັ້ນຕອນ. ມັນເປັນພາລະກິດຂອງອີກຍຸກໃໝ່ ແລະ ບໍ່ແມ່ນຕົວແທນຂອງພາລະກິດແຫ່ງການຄຸ້ມຄອງທັງໝົດ. ແຜນການຄຸ້ມຄອງຫົກພັນປີຖືກແບ່ງອອກເປັນສາມຂັ້ນຕອນຂອງພາລະກິດ. ບໍ່ມີຂັ້ນຕອນໃດສາມາດເປັນຕົວແທນພາລະກິດທັງສາມຍຸກໄດ້, ແຕ່ເປັນພຽງພາກສ່ວນໜຶ່ງຂອງພາລະກິດທັງໝົດ. ຊື່ຂອງພຣະເຢໂຮວາບໍ່ສາມາດເປັນຕົວແທນໃຫ້ກັບອຸປະນິໄສຂອງພຣະເຈົ້າທັງໝົດໄດ້. ຄວາມຈິງທີ່ວ່າ ພຣະອົງໄດ້ປະຕິບັດພາລະກິດຂອງພຣະອົງໃນຍຸກແຫ່ງພຣະບັນຍັດບໍ່ໄດ້ພິສູດໃຫ້ເຫັນວ່າ ພຣະເຈົ້າເປັນພຽງພຣະເຈົ້າທີ່ຢູ່ພາຍໃຕ້ພຣະບັນຍັດເທົ່ານັ້ນ. ພຣະເຢໂຮວາສ້າງຕັ້ງພຣະບັນຍັດເພື່ອມະນຸດ ແລະ ວາງຂໍ້ພຣະບັນຍັດເຫຼົ່ານັ້ນໃຫ້ກັບພວກເຂົາ, ຮຽກຮ້ອງໃຫ້ມະນຸດສ້າງພຣະວິຫານ ແລະ ແທ່ນບູຊາ; ພາລະກິດທີ່ພຣະອົງປະຕິບັດພຽງແຕ່ເປັນຕົວແທນໃຫ້ກັບຍຸກແຫ່ງພຣະບັນຍັດເທົ່ານັ້ນ. ພາລະກິດນີ້ທີ່ພຣະອົງປະຕິບັດບໍ່ໄດ້ພິສູດໃຫ້ເຫັນວ່າ ພຣະອົງເປັນພຽງພຣະເຈົ້າທີ່ຮຽກຮ້ອງໃຫ້ມະນຸດຮັກສາພຣະບັນຍັດ ຫຼື ພຣະອົງເປັນພຣະເຈົ້າພຽງໃນພຣະວິຫານ ຫຼື ພຣະອົງເປັນພຽງພຣະເຈົ້າຕໍ່ໜ້າແທ່ນບູຊາເທົ່ານັ້ນ. ການເວົ້າແບບນັ້ນຈະບໍ່ແມ່ນຄວາມຈິງ. ພາລະກິດທີ່ສຳເລັດພາຍໃຕ້ພຣະບັນຍັດກໍເປັນຕົວແທນໃຫ້ພຽງແຕ່ຍຸກໃດໜຶ່ງ. ດັ່ງນັ້ນ ຖ້າພຣະເຈົ້າພຽງແຕ່ປະຕິບັດພາລະກິດໃນຍຸກແຫ່ງພຣະບັນຍັດເທົ່ານັ້ນ ມະນຸດກໍຈະກຳນົດພຣະເຈົ້າໃນຄວາມໝາຍດັ່ງຕໍ່ໄປນີ້ ໂດຍເວົ້າວ່າ “ພຣະເຈົ້າເປັນພຣະເຈົ້າໃນພຣະວິຫານ ແລະ ເພື່ອຮັບໃຊ້ພຣະເຈົ້າ ພວກເຮົາຕ້ອງນຸ່ງເສື້ອຄຸມປະໂລຫິດ ແລະ ເຂົ້າໄປໃນພຣະວິຫານ”. ຖ້າພາລະກິດໃນຍຸກ

ແຫ່ງພຣະຄຸນບໍ່ໄດ້ເກີດຂຶ້ນ ແລະ ຍຸກແຫ່ງພຣະບັນຍັດໄດ້ສືບຕໍ່ມາຈົນເຖິງທຸກມື້ນີ້ ມະນຸດຈະບໍ່ຮູ້ວ່າ ພຣະເຈົ້າຍັງມີຄວາມເມດຕາ ແລະ ຄວາມຮັກ. ຖ້າພາລະກິດໃນຍຸກແຫ່ງພຣະບັນຍັດບໍ່ໄດ້ປະຕິບັດໃຫ້ສຳເລັດ ແລະ ກົງກັນຂ້າມ ມີພຽງແຕ່ພາລະກິດໃນຍຸກແຫ່ງພຣະຄຸນເທົ່ານັ້ນ ແລ້ວມວນມະນຸດກໍຈະຮູ້ແຕ່ວ່າພຣະເຈົ້າພຽງແຕ່ສາມາດໄຖ່ບາບໃຫ້ກັບມະນຸດ ແລະ ອະໄພຄວາມຜິດບາບໃຫ້ມະນຸດເທົ່ານັ້ນ. ມະນຸດຈະຮູ້ພຽງແຕ່ວ່າພຣະອົງເປັນອົງບໍລິສຸດ ແລະ ອົງໄຮ້ດຽງສາ ແລະ ຍ້ອນເຫັນແກ່ມະນຸດ ພຣະອົງຈຶ່ງສາມາດສະຫຼະພຣະອົງເອງ ແລະ ຍອມຖືກຄຶງໃສ່ເທິງໄມ້ກາງແຂນ. ມະນຸດຈະຮູ້ແຕ່ພຽງສິ່ງເຫຼົ່ານີ້ ແຕ່ຈະບໍ່ເຂົ້າໃຈໃນສິ່ງອື່ນໃດເລີຍ. ສະນັ້ນແຕ່ລະຍຸກສະແດງໃຫ້ເຫັນສ່ວນໜຶ່ງຂອງອຸປະນິໄສຂອງພຣະເຈົ້າ. ແຕ່ສຳລັບສ່ວນໃດຂອງອຸປະນິໄສຂອງພຣະເຈົ້າຄືຕົວແທນໃນຍຸກແຫ່ງພຣະບັນຍັດ, ສ່ວນໃດຄືຕົວແທນຍຸກແຫ່ງພຣະຄຸນ ແລະ ສ່ວນໃດຄືຕົວແທນໃນຍຸກປັດຈຸບັນ ແມ່ນຂຶ້ນຢູ່ກັບທັງສາມຍຸກ. ເມື່ອສາມຍຸກໄດ້ລວມເຂົ້າກັນເປັນອັນໜຶ່ງອັນດຽວກັນແລ້ວ ທັງສາມຍຸກຈະສາມາດເປີດເຜີຍອຸປະນິໄສຂອງພຣະເຈົ້າໄດ້ທັງໝົດ. ພຽງແຕ່ເມື່ອມະນຸດໄດ້ມາຮູ້ຈັກທັງສາມຂັ້ນຕອນນີ້ທັງໝົດ ພວກເຂົາຈຶ່ງຈະສາມາດເຂົ້າໃຈຢ່າງແທ້ຈິງ. ບໍ່ມີຂັ້ນຕອນໃດໃນສາມຂັ້ນຕອນທີ່ສາມາດຕັດອອກໄດ້. ຫລັງຈາກໄດ້ຮູ້ຈັກພາລະກິດສາມຂັ້ນຕອນເຫຼົ່ານີ້ແລ້ວ ເຈົ້າຈະເຫັນອຸປະນິໄສທັງໝົດຂອງພຣະເຈົ້າ. ຄວາມຈິງທີ່ພຣະເຈົ້າສຳເລັດພາລະກິດໃນຍຸກແຫ່ງພຣະບັນຍັດບໍ່ໄດ້ພິສູດວ່າ ພຣະອົງເປັນພຣະເຈົ້າພາຍໃຕ້ພຣະບັນຍັດ ແລະ ຄວາມຈິງທີ່ວ່າ ພຣະອົງສຳເລັດພາລະກິດແຫ່ງການໄຖ່ບາບບໍ່ໄດ້ໝາຍຄວາມວ່າພຣະເຈົ້າຈະໄຖ່ບາບມະນຸດຊາດຕະຫຼອດໄປ. ສິ່ງເຫຼົ່ານີ້ແມ່ນເປັນການສະຫຼຸບໂດຍມະນຸດເອງ. ຍຸກແຫ່ງພຣະຄຸນໄດ້ສິ້ນສຸດລົງ ແຕ່ເຈົ້າບໍ່ສາມາດເວົ້າວ່າ ພຣະເຈົ້າເປັນພຽງໄມ້ກາງແຂນເທົ່ານັ້ນ ແລະ ໄມ້ກາງແຂນເທົ່ານັ້ນທີ່ເປັນຕົວແທນຄວາມລອດພົ້ນຂອງພຣະເຈົ້າ. ການເວົ້າແບບນັ້ນກໍຈະເປັນການຕໍ່ຕ້ານພຣະເຈົ້າ. ໃນຂັ້ນຕອນປັດຈຸບັນ ພຣະເຈົ້າພຽງປະຕິບັດພາລະກິດກ່ຽວກັບພຣະທຳເປັນສ່ວນໃຫຍ່ ແຕ່ເຈົ້າບໍ່ສາມາດເວົ້າວ່າພຣະເຈົ້າບໍ່ເຄີຍມີຄວາມເມດຕາຕໍ່ມະນຸດຈັກເທື່ອ ແລະ ສິ່ງທີ່ພຣະອົງນຳມາມີພຽງການຕີສອນ ແລະ ການພິພາກສາເທົ່ານັ້ນ. ພາລະກິດໃນຍຸກສຸດທ້າຍເປີດເຜີຍພາລະກິດຂອງພຣະເຢໂຮວາ, ພຣະເຢຊູ ແລະ ຄວາມລຶກລັບທັງໝົດທີ່ມະນຸດບໍ່ສາມາດເຂົ້າໃຈມັນໄດ້, ພ້ອມທັງເປີດເຜີຍຈຸດໝາຍປາຍທາງ ແລະ ຈຸດຈົບຂອງມະນຸດຊາດ ແລະ ສິ້ນສຸດພາລະກິດແຫ່ງຄວາມລອດພົ້ນທັງໝົດທ່າມກາງມະນຸດຊາດ. ຂັ້ນຕອນຂອງພາລະກິດໃນຍຸກສຸດທ້າຍນີ້ຈະນຳພາທຸກສິ່ງໄປສູ່ການສິ້ນສຸດ. ຄວາມລຶກລັບທັງໝົດທີ່ມະນຸດບໍ່ເຂົ້າໃຈຈະໄດ້ຖືກເປີດເຜີຍເພື່ອວ່າມະນຸດຈະໄດ້ຢັ່ງເຖິງຄວາມລຶກລັບດັ່ງກ່າວຢ່າງເລິກເຊິ່ງ ແລະ ມີຄວາມເຂົ້າໃຈຢ່າງແຈ່ມແຈ້ງ. ດ້ວຍວິທີນີ້ເທົ່ານັ້ນມະນຸດຊາດຈຶ່ງຈະສາມາດຖືກຈັດແບ່ງອອກຕາມປະເພດຂອງໃຜມັນ. ມີພຽງແຕ່ຫລັງຈາກແຜນການຄຸ້ມຄອງຫົກພັນປີໄດ້ສຳເລັດລົງ ມະນຸດຈຶ່ງຈະສາມາດເຂົ້າໃຈເຖິງອຸປະນິໄສຂອງພຣະເຈົ້າທັງໝົດເພາະວ່າໃນຕອນນັ້ນການຄຸ້ມຄອງຂອງພຣະອົງກໍຈະສິ້ນສຸດລົງເຊັ່ນກັນ. ບັດນີ້ ພວກເຈົ້າໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍ, ແມ່ນຫຍັງຄືອຸປະນິໄສຂອງພຣະເຈົ້າ? ເຈົ້າກ້າເວົ້າບໍວ່າພຣະເຈົ້າເປັນພຣະເຈົ້າທີ່ພຽງແຕ່ກ່າວພຣະທຳ ແລະ ບໍ່ເຮັດສິ່ງອື່ນອີກ? ເຈົ້າຈະບໍ່ກ້າສະຫຼຸບແບບນັ້ນ.

ບາງຄົນເວົ້າວ່າ ພຣະເຈົ້າເປັນພຣະເຈົ້າທີ່ເປີດເຜີຍຄວາມເລິກລັບ, ພຣະເຈົ້າເປັນພຣະເມສານ້ອຍ ແລະ ຜູ້ທີ່ທຳລາຍຕາປະທັບທັງເຈັດ. ແຕ່ບໍ່ມີໃຜກ້າສະຫຼຸບແບບນັ້ນ. ຄົນອື່ນອາດເວົ້າວ່າ ພຣະເຈົ້າເປັນເນື້ອໜັງທີ່ບັງເກີດເປັນມະນຸດ, ແຕ່ສິ່ງນີ້ກໍຍັງບໍ່ຖືກຕ້ອງ. ຍັງມີຄົນອື່ນອາດເວົ້າວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດພຽງແຕ່ກ່າວພຣະທຳເທົ່ານັ້ນ ແລະ ບໍ່ເຮັດໝາຍສຳຄັນ ແລະ ການອັດສະຈັນ, ແຕ່ເຈົ້າຈະກ້າເວົ້າໃນລັກສະນະນີ້ອີກຢູ່ບໍ, ຍ້ອນພຣະເຢຊູກາຍມາເປັນເນື້ອໜັງ ແລະ ພຣະອົງໄດ້ເຮັດໝາຍສຳຄັນ ແລະ ການອັດສະຈັນ, ດັ່ງນັ້ນ ເຈົ້າຈະບໍ່ກ້າກຳນົດພຣະເຈົ້າຢ່າງງ່າຍໆແບບນີ້ອີກ. ພາລະກິດທັງໝົດທີ່ຖືກປະຕິບັດດ້ວຍແຜນການຄຸ້ມຄອງຫົກພັນປີແມ່ນຫາກໍມາເຖິງຈຸດສິ້ນສຸດ. ມີພຽງແຕ່ຫຼັງຈາກທີ່ພາລະກິດທັງໝົດຖືກເປີດເຜີຍອອກໃຫ້ກັບມະນຸດ ແລະ ຖືກປະຕິບັດໃນທ່າມກາງມະນຸດ ມະນຸດຊາດທັງປວງຈຶ່ງຈະຮູ້ຈັກອຸປະນິໄສທຸກຢ່າງຂອງພຣະອົງ ແລະ ສິ່ງທີ່ພຣະອົງມີ ແລະ ເປັນ. ເມື່ອພາລະກິດໃນຂັ້ນຕອນນີ້ຖືກເຮັດໃຫ້ສຳເລັດຢ່າງສົມບູນ, ຄວາມເລິກລັບທັງປວງທີ່ມະນຸດບໍ່ເຂົ້າໃຈກໍຈະຖືກເປີດເຜີຍອອກ, ຄວາມຈິງທຸກຢ່າງທີ່ບໍ່ເຂົ້າໃຈກ່ອນໜ້ານີ້ກໍຈະຖືກເຮັດໃຫ້ຈະແຈ້ງຂຶ້ນ ແລະ ມະນຸດຊາດຈະຮັບຮູ້ເຖິງເສັ້ນທາງ ແລະ ຈຸດໝາຍປາຍທາງໃນອະນາຄົດຂອງພວກເຂົາ. ນີ້ແມ່ນພາລະກິດທັງໝົດທີ່ຈະຖືກປະຕິບັດໃນຂັ້ນຕອນປັດຈຸບັນ. ເຖິງແມ່ນວ່າເສັ້ນທາງທີ່ມະນຸດເດີນໃນປັດຈຸບັນເປັນເສັ້ນທາງແຫ່ງໄມ້ກາງແຂນ ແລະ ເສັ້ນທາງແຫ່ງຄວາມທຸກທໍລະມານ ແຕ່ສິ່ງທີ່ມະນຸດປະຕິບັດ ແລະ ສິ່ງທີ່ມະນຸດກິນ ດື່ມ ແລະ ຊື່ນຊົມທຸກມື້ນີ້ແມ່ນແຕກຕ່າງຢ່າງສິ້ນເຊີງຈາກສິ່ງທີ່ມະນຸດໄດ້ຮັບຢູ່ພາຍໃຕ້ພຣະບັນຍັດ ແລະ ໃນຍຸກແຫ່ງພຣະຄຸນ. ສິ່ງທີ່ມະນຸດຮຽກຮ້ອງໃນປັດຈຸບັນບໍ່ຄືກັບສິ່ງທີ່ຮຽກຮ້ອງໃນອະດີດ ແລະ ຍິ່ງໄປກວ່ານັ້ນກໍບໍ່ຄືກັບສິ່ງທີ່ໄດ້ຮຽກຮ້ອງຈາກມະນຸດໃນຍຸກພຣະບັນຍັດ. ແລ້ວແມ່ນຫຍັງຄືສິ່ງທີ່ຮຽກຮ້ອງຈາກມະນຸດພາຍໃຕ້ກົດພຣະບັນຍັດໃນເວລາທີ່ພຣະອົງປະຕິບັດພາລະກິດຂອງພຣະອົງໃນດິນແດນອິດສະຣາເອນ? ມັນກໍບໍ່ມີຫຍັງຫຼາຍໄປກວ່າໃຫ້ມະນຸດຮັກສາວັນຊະບາໂຕ ແລະ ພຣະບັນຍັດຂອງພຣະເຢໂຮວາ. ໃນຍຸກນັ້ນບໍ່ມີຜູ້ໃດເຮັດວຽກໃນວັນຊະບາໂຕ ແລະ ລະເມີດພຣະບັນຍັດຂອງພຣະເຢໂຮວາ. ແຕ່ໃນປັດຈຸບັນບໍ່ເປັນແບບນັ້ນ. ໃນວັນຊະບາໂຕ ມະນຸດຈະເຮັດວຽກ, ຊຸມນຸມ ແລະ ອະທິຖານເປັນປົກກະຕິ ແລະ ບໍ່ມີຂໍ້ຫ້າມໃດໆສຳລັບພວກເຂົາ. ສ່ວນຄົນທີ່ຢູ່ໃນຍຸກແຫ່ງພຣະຄຸນ ນັ້ນແມ່ນຕ້ອງໄດ້ຮັບບັບຕິດສະມາ ແລະ ຍິ່ງໄປກວ່ານັ້ນ ພວກເຂົາຍັງຕ້ອງໄດ້ຖືກຮຽກຮ້ອງໃຫ້ອົດອາຫານ, ຫັກເຂົ້າຈີ່, ດື່ມເຫຼົ້າ, ຜ້າປົກຄຸມຫົວ ແລະ ໃຫ້ພວກເຂົາລ້າງຕີນໃຫ້ຄົນອື່ນ. ໃນປັດຈຸບັນ ກົດເກນເຫຼົ່ານີ້ຖືກຍົກເລີກໄປໝົດແລ້ວ ແຕ່ຄວາມຮຽກຮ້ອງຕ້ອງການຈາກມະນຸດແມ່ນເພີ່ມຫຼາຍຂຶ້ນ ເນື່ອງຈາກວ່າ ພາລະກິດຂອງພຣະເຈົ້າໄດ້ລົງເລິກເຂົ້າໄປຢ່າງບໍ່ສິ້ນສຸດ ແລະ ທາງເຂົ້າຂອງມະນຸດແມ່ນຍິ່ງສູງຂຶ້ນ. ໃນອະດີດ ພຣະເຢຊູວາງມືຂອງພຣະອົງໃສ່ມະນຸດ ແລະ ອະທິຖານ ແຕ່ປັດຈຸບັນເມື່ອທຸກສິ່ງໄດ້ກ່າວໄປໝົດແລ້ວ ຈະມີປະໂຫຍດຫຍັງກັບການວາງມືໃສ່ມະນຸດ? ພຽງພຣະທຳເທົ່ານັ້ນກໍສາມາດບັນລຸຜົນໄດ້ແລ້ວ. ເມື່ອພຣະອົງວາງມືຂອງພຣະອົງໃສ່ມະນຸດໃນອະດີດ, ມັນແມ່ນການໃຫ້ພອນມະນຸດ ແລະ ຍັງເປັນການຮັກສາເຂົາໃຫ້ຫາຍຈາກໂລກໄພໄຂ້ເຈັບ. ນີ້ແມ່ນວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດໃນເວລານັ້ນ, ແຕ່ມັນບໍ່ແມ່ນແບບນັ້ນໃນປັດຈຸບັນ.

ທຸກມື້ນີ້ ພຣະວິນຍານບໍລິສຸດໃຊ້ພຣະທຳເພື່ອປະຕິບັດພາລະກິດ ແລະ ເພື່ອບັນລຸຜົນ. ພຣະທຳຂອງພຣະອົງຖືກເຮັດໃຫ້ຊັດເຈນຕໍ່ພວກເຈົ້າ ແລະ ພວກເຈົ້າຄວນນຳພຣະທຳເຫຼົ່ານັ້ນເຂົ້າສູ່ການປະຕິບັດດັ່ງທີ່ພວກເຈົ້າໄດ້ຖືກມອບໝາຍໄວ້. ພຣະທຳຂອງພຣະອົງຄືຄວາມປະສົງຂອງພຣະອົງ; ສິ່ງເຫຼົ່ານັ້ນແມ່ນພາລະກິດທີ່ພຣະອົງປາຖະໜາທີ່ຈະປະຕິບັດ. ຜ່ານທາງພຣະທຳຂອງພຣະອົງ, ເຈົ້າຈະເຂົ້າໃຈຄວາມປະສົງຂອງພຣະອົງ ແລະ ສິ່ງທີ່ພຣະອົງຮຽກຮ້ອງໃຫ້ເຈົ້າບັນລຸ ແລະ ເຈົ້າພຽງແຕ່ນຳພຣະທຳຂອງພຣະອົງເຂົ້າສູ່ການປະຕິບັດໂດຍກົງ ໂດຍບໍ່ຈຳເປັນຕ້ອງວາງມືໃສ່ໃຜ. ບາງຄົນເວົ້າວ່າ “ຂໍໃຫ້ວາງມືຂອງພຣະອົງໃສ່ຂ້ານ້ອຍ! ຂໍໃຫ້ວາງມືຂອງພຣະອົງໃສ່ຂ້ານ້ອຍເພື່ອຂ້ານ້ອຍຈະໄດ້ຮັບພອນຈາກພຣະອົງ ແລະ ເພື່ອຂ້ານ້ອຍຈະເປັນສ່ວນໜຶ່ງຂອງພຣະອົງ”. ທຸກສິ່ງເຫຼົ່ານີ້ແມ່ນການປະຕິບັດທີ່ຫຼ້າສະໄໝໃນອະດີດ, ປັດຈຸບັນນີ້ໄດ້ເຊົາໃຊ້ແລ້ວ, ເພາະວ່າຍຸກໄດ້ປ່ຽນແປງໄປ. ພຣະວິນຍານບໍລິສຸດປະຕິບັດພາລະກິດຕາມຍຸກ, ບໍ່ໄດ້ປະຕິບັດໂດຍບັງເອີນ ຫຼື ປະຕິບັດໃຫ້ສອດຄ່ອງກັບກົດລະບຽບໃດໜຶ່ງທີ່ກຳນົດຂຶ້ນ. ຍຸກໄດ້ປ່ຽນໄປ ແລະ ຍຸກໃໝ່ຈຳເປັນຕ້ອງມີພາລະກິດໃໝ່. ສິ່ງນີ້ເປັນຄວາມຈິງຂອງທຸກຂັ້ນຕອນຂອງພາລະກິດ ແລະ ສະນັ້ນ ພາລະກິດຂອງພຣະອົງຈຶ່ງບໍ່ເຄີຍຖືກເຮັດຊ້ຳກັນຈັກເທື່ອ. ໃນຍຸກແຫ່ງພຣະຄຸນ, ພຣະເຢຊູປະຕິບັດພາລະກິດປະເພດດັ່ງກ່າວຫຼາຍພໍສົມຄວນ ເຊັ່ນ: ການຮັກສາຄົນເຈັບປ່ວຍ, ການຂັບໄລ່ຜີຮ້າຍ, ການວາງມືຂອງພຣະອົງໃສ່ມະນຸດເພື່ອອະທິຖານໃຫ້ກັບເຂົາ ແລະ ປະທານພອນໃຫ້ແກ່ມະນຸດ. ແຕ່ການປະຕິບັດແບບນັ້ນອີກຄັ້ງຈະບໍ່ມີຄວາມໝາຍຫຍັງໃນປັດຈຸບັນ. ໃນເວລານັ້ນ ພຣະວິນຍານບໍລິສຸດປະຕິບັດພາລະກິດໃນລັກສະນະນັ້ນກໍຍ້ອນວ່າມັນເປັນຍຸກແຫ່ງພຣະຄຸນ ແລະ ໃນຍຸກນັ້ນແມ່ນມີຄວາມເມດຕາກະລຸນາຕໍ່ມະນຸດຢ່າງຫຼວງຫຼາຍ. ບໍ່ມີການຮຽກຮ້ອງໃຫ້ເຂົາຈ່າຍລາຄາ ບໍ່ວ່າໃນຮູບແບບໃດກໍຕາມ ແລະ ຕາບໃດທີ່ເຂົາມີຄວາມເຊື່ອ ເຂົາກໍຈະໄດ້ຮັບຄວາມກະລຸນາ. ທຸກຄົນຖືກປະຕິບັດດ້ວຍຄວາມເມດຕາຢ່າງຫຼວງຫຼາຍ. ປັດຈຸບັນນີ້ ຍຸກໄດ້ປ່ຽນແປງແລ້ວ ແລະ ພາລະກິດຂອງພຣະເຈົ້າໄດ້ກ້າວໜ້າຂຶ້ນ. ການຕໍ່ຕ້ານຂອງມະນຸດ ແລະ ສິ່ງທີ່ສົກກະປົກພາຍໃນມະນຸດຈະຖືກລົບລ້າງຜ່ານການຕີສອນ ແລະ ການພິພາກສາ. ຂັ້ນຕອນນັ້ນເປັນຂັ້ນຕອນແຫ່ງການໄຖ່ບາບ, ພຣະເຈົ້າຈຳເປັນຕ້ອງປະຕິບັດພາລະກິດດ້ວຍວິທີນັ້ນ ເຊິ່ງພຣະອົງໄດ້ສະແດງພຣະຄຸນຢ່າງພຽງພໍໃຫ້ມະນຸດໄດ້ຊື່ນຊົມ ເພື່ອວ່າມະນຸດຈະໄດ້ຮັບການໄຖ່ບາບ ແລະ ດ້ວຍວິທີທາງແຫ່ງພຣະຄຸນ ພວກເຂົາຈະໄດ້ຮັບການອະໄພຈາກຄວາມຜິດບາບຂອງພວກເຂົາ. ແຕ່ຂັ້ນຕອນປັດຈຸບັນນີ້ແມ່ນເພື່ອເປີດເຜີຍຄວາມບໍ່ຊອບທຳພາຍໃນມະນຸດດ້ວຍວິທີການຕີສອນ, ການພິພາກສາ, ການລົງໂທດດ້ວຍພຣະທຳ ພ້ອມດ້ວຍວິໄນ ແລະ ການເປີດເຜີຍພຣະທຳ ເພື່ອມະນຸດຈະໄດ້ລອດພົ້ນ. ນີ້ແມ່ນພາລະກິດທີ່ເລິກເຊິ່ງກວ່າການໄຖ່ບາບ. ຄວາມກະລຸນາໃນຍຸກແຫ່ງພຣະຄຸນແມ່ນພຽງພໍສຳລັບການຊື່ນຊົມຂອງມະນຸດ; ບັດນີ້ເມື່ອມະນຸດໄດ້ສຳຜັດກັບພຣະຄຸນນີ້ແລ້ວ, ພວກເຂົາບໍ່ຈຳເປັນຕ້ອງຊື່ນຊົມມັນອີກຕໍ່ໄປ. ພາລະກິດນີ້ໄດ້ຜ່ານໄປແລ້ວ ແລະ ບໍ່ຕ້ອງປະຕິບັດມັນອີກຕໍ່ໄປ. ບັດນີ້ ມະນຸດຈະຖືກຊ່ວຍໃຫ້ລອດພົ້ນຜ່ານການພິພາກສາແຫ່ງພຣະທຳ. ຫລັງຈາກທີ່ມະນຸດຖືກຕັດສິນ, ຕີສອນ ແລະ ຊຳລະລ້າງ ຈາກນັ້ນອຸປະນິໄສຂອງພວກເຂົາກໍໄດ້ຮັບການປ່ຽນແປງ. ທັງໝົດນີ້ບໍ່ແມ່ນຍ້ອນພຣະທຳທີ່

ເຮົາໄດ້ກ່າວບໍ? ແຕ່ລະຂັ້ນຕອນຂອງພາລະກິດແມ່ນຖືກປະຕິບັດອີງຕາມຄວາມກ້າວໜ້າຂອງມວນມະນຸດຊາດ ແລະ ອີງຕາມຍຸກສະໄໝນັ້ນ. ພາລະກິດທັງໝົດມີຄວາມສຳຄັນ ແລະ ຖືກປະຕິບັດເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນຄັ້ງສຸດທ້າຍ ເພື່ອມະນຸດອາດມີຈຸດໝາຍປາຍທາງທີ່ດີໃນອະນາຄົດ ແລະ ເພື່ອມະນຸດຊາດຈະໄດ້ຖືກຈັດແບ່ງອອກອີງຕາມປະເພດຂອງພວກເຂົາໃນທີ່ສຸດ.

ພາລະກິດແຫ່ງຍຸກສຸດທ້າຍແມ່ນເພື່ອກ່າວພຣະທຳ. ການປ່ຽນແປງຄັ້ງຍິ່ງໃຫຍ່ຈະເກີດຜົນໃນມະນຸດໂດຍຜ່ານວິທີທາງແຫ່ງພຣະທຳ. ການປ່ຽນແປງໃນປັດຈຸບັນແມ່ນມີຜົນຕໍ່ຜູ້ຄົນທີ່ຍອມຮັບເອົາພຣະທຳຫຼາຍກວ່າຕໍ່ຜູ້ຄົນທີ່ຍອມຮັບເອົາໝາຍສຳຄັນ ແລະ ຄວາມອັດສະຈັນຂອງຍຸກແຫ່ງພຣະຄຸນ. ເນື່ອງຈາກວ່າ ໃນຍຸກແຫ່ງພຣະຄຸນນັ້ນ ພວກມານຮ້າຍແມ່ນຖືກຂັບໄລ່ອອກຈາກມະນຸດໂດຍການເອົາມືວາງໃສ່ມະນຸດ ແລ້ວອະທິຖານ ແຕ່ການຂັບໄລ່ມານຮ້າຍແບບນັ້ນບໍ່ໄດ້ລົບລ້າງຄວາມເສື່ອມຊາມອອກຈາກຈິດໃຈຂອງມະນຸດເລີຍ ມະນຸດໄດ້ຮັບການຮັກສາຈາກຄວາມເຈັບປ່ວຍຂອງເຂົາ ແລະ ຮັບການອະໄພຈາກຄວາມບາບຂອງເຂົາ ແຕ່ສຳລັບວິທີການລົບລ້າງອຸປະນິໄສອັນເສື່ອມຊາມແບບຊາຕານໃນມະນຸດນັ້ນ, ພາລະກິດນີ້ຍັງບໍ່ໄດ້ປະຕິບັດເທື່ອ. ມະນຸດພຽງແຕ່ໄດ້ຮັບຄວາມພົ້ນ ແລະ ຮັບການອະໄພຈາກຄວາມບາບຂອງພວກເຂົາຍ້ອນຄວາມເຊື່ອເທົ່ານັ້ນ ແຕ່ທຳມະຊາດຄວາມຜິດບາບຂອງມະນຸດບໍ່ໄດ້ຖືກທຳລາຍ ແລະ ຍັງຝັງຢູ່ໃນຈິດໃຈຂອງພວກເຂົາ. ຄວາມຜິດບາບຂອງມະນຸດໄດ້ຮັບການອະໄພຜ່ານກິດຈະການຂອງພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດ ແຕ່ນີ້ບໍ່ໄດ້ໝາຍຄວາມວ່າມະນຸດບໍ່ມີຄວາມບາບໃນພວກເຂົາອີກຕໍ່ໄປ. ຄວາມຜິດບາບຂອງມະນຸດໄດ້ຮັບການອະໄພຜ່ານເຄື່ອງບູຊາໄຖ່ບາບ ແຕ່ສຳລັບວິທີທີ່ຈະເຮັດໃຫ້ມະນຸດບໍ່ມີຄວາມຜິດບາບອີກຕໍ່ໄປ ແລະ ວິທີທີ່ຈະທຳລາຍລ້າງ ແລະ ປ່ຽນແປງທຳມະຊາດຄວາມຜິດບາບຂອງພວກເຂົາຢ່າງສິ້ນເຊີງນັ້ນ ມະນຸດບໍ່ມີວິທີແກ້ໄຂບັນຫານີ້ເລີຍ. ຄວາມຜິດບາບຂອງມະນຸດໄດ້ຮັບການອະໄພ ແລະ ນີ້ກໍຍ້ອນພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນຂອງພຣະເຈົ້າ ແຕ່ມະນຸດຍັງສືບຕໍ່ດຳລົງຊີວິດຢູ່ກັບອຸປະນິໄສອັນເສື່ອມຊາມແບບຊາຕານຄືເກົ່າ. ເມື່ອເປັນເຊັ່ນນີ້ ມະນຸດຕ້ອງໄດ້ຊ່ວຍໃຫ້ລອດພົ້ນຢ່າງສົມບູນຈາກອຸປະນິໄສທີ່ເສື່ອມຊາມແບບຊາຕານຂອງພວກເຂົາ ເພື່ອທຳມະຊາດແຫ່ງຄວາມຜິດບາບຂອງພວກເຂົາຈະໄດ້ຖືກທຳລາຍລ້າງຢ່າງສົມບູນ ແລະ ຈະບໍ່ມີຄວາມເສື່ອມຊາມເກີດຂຶ້ນອີກຕໍ່ໄປ, ດ້ວຍວິທີນີ້ຈະເຮັດໃຫ້ອຸປະນິໄສຂອງມະນຸດໄດ້ຮັບການປ່ຽນແປງໃໝ່. ແຕ່ມະນຸດຕ້ອງເຂົ້າໃຈຫົນທາງແຫ່ງການເຕີບໂຕຂອງຊີວິດ, ຕ້ອງເຂົ້າໃຈຫົນທາງແຫ່ງຊີວິດ ແລະ ເຂົ້າໃຈຫົນທາງໃນການປ່ຽນແປງອຸປະນິໄສຂອງພວກເຂົາ. ຍິ່ງໄປກວ່ານັ້ນ ມະນຸດຕ້ອງໄດ້ປະຕິບັດຕາມເສັ້ນທາງດັ່ງກ່າວນີ້ ເພື່ອອຸປະນິໄສຂອງພວກເຂົາຈະໄດ້ຮັບການປ່ຽນແປງເທື່ອລະໜ້ອຍ ແລະ ໃຊ້ຊີວິດຢູ່ພາຍໃຕ້ແສງສະຫວ່າງ ເພື່ອທຸກສິ່ງທີ່ພວກເຂົາປະຕິບັດຈະສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ, ເພື່ອພວກເຂົາຈະປະຖິ້ມອຸປະນິໄສຊົ່ວຮ້າຍທີ່ເສື່ອມໂຊມ, ເພື່ອພວກເຂົາຈະໄດ້ເປັນອິດສະຫຼະຈາກອິດທິພົນແຫ່ງຄວາມມືດຂອງຊາຕານ ແລະ ຫຼຸດພົ້ນອອກຈາກຄວາມຜິດບາບຢ່າງສົມບູນ. ເມື່ອນັ້ນມະນຸດຈະໄດ້ຮັບຄວາມລອດພົ້ນຢ່າງຄົບຖ້ວນ. ໃນເວລາທີ່ພຣະເຢຊູປະຕິບັດພາລະກິດຂອງພຣະອົງນັ້ນ ຄວາມຮູ້ຂອງມະນຸດກ່ຽວກັບພຣະອົງຍັງມືດມົວຢູ່ ແລະ

ບໍ່ທັນແຈ່ມແຈ້ງເທື່ອ. ມະນຸດເຊື່ອສະເໝີວ່າ ພຣະອົງເປັນບຸດຊາຍຂອງເດວິດ ແລະ ປະກາດພຣະອົງໃຫ້ເປັນສາສະດາທີ່ຍິ່ງໃຫຍ່ ເປັນພຣະຜູ້ເປັນເຈົ້າທີ່ມີຄວາມເມດຕາກະລຸນາທີ່ໄຖ່ບາບໃຫ້ກັບມະນຸດ. ຍ້ອນຄວາມເຊື່ອຂອງພວກເຂົາ ບາງຄົນກໍໄດ້ຮັບການປິ່ນປົວພຽງແຕ່ໄດ້ຈັບບາຍຂອບເສື້ອຜ້າຂອງພຣະອົງ; ຄົນຕາບອດກໍສາມາດເຫັນ ແລະ ແມ່ນແຕ່ຄົນຕາຍຍັງສາມາດຟື້ນຄືນໄດ້. ເຖິງຢ່າງໃດກໍຕາມມະນຸດບໍ່ສາມາດຄົ້ນພົບອຸປະນິໄສຊົ່ວຮ້າຍອັນເສື່ອມຊາມທີ່ຝັງເລິກຢູ່ພາຍໃນຕົວພວກເຂົາ ຫຼື ພວກເຂົາບໍ່ຮູ້ວິທີທາງກຳຈັດອຸປະນິໄສນັ້ນອອກໄປ. ມະນຸດໄດ້ຮັບພຣະກະລຸນາຢ່າງໃຫຍ່ຫຼວງ ເຊັ່ນ: ຄວາມສະຫງົບສຸກ, ຄວາມສຸກຂອງຮ່າງກາຍ, ຄວາມສັດທາພຽງຄົນດຽວກໍນຳການອວຍພອນມາເຖິງຄອບຄົວທັງໝົດ, ການຮັກສາຄວາມເຈັບປ່ວຍ ແລະ ອື່ນໆ. ສ່ວນທີ່ເຫຼືອແມ່ນເປັນການກະທຳດີຂອງມະນຸດ ແລະ ການມີສິນທຳ. ຖ້າມະນຸດສາມາດດຳລົງຊີວິດບົນພື້ນຖານສິ່ງເຫຼົ່ານີ້ ພວກເຂົາຖືວ່າເປັນຜູ້ເຊື່ອທີ່ເໝາະສົມທີ່ສຸດ. ມີພຽງຜູ້ເຊື່ອແບບນີ້ເທົ່ານັ້ນເມື່ອຕາຍໄປຈະໄດ້ໄປສູ່ສະຫວັນ ເຊິ່ງໝາຍຄວາມວ່າພວກເຂົາໄດ້ຖືກຊ່ວຍໃຫ້ພົ້ນແລ້ວ. ແຕ່ວ່າ ໃນຊີວິດຂອງພວກເຂົາ ຜູ້ຄົນເຫຼົ່ານີ້ບໍ່ເຄີຍເຂົ້າໃຈຫົນທາງແຫ່ງຊີວິດເລີຍ. ພວກເຂົາສ້າງແຕ່ຄວາມບາບ ສ້າງບາບແລ້ວກໍສາລະພາບບາບ. ເຮັດແບບນັ້ນຊ້ຳແລ້ວຊ້ຳອີກໂດຍບໍ່ມີການຄົ້ນຄິດຫາເສັ້ນທາງເພື່ອປ່ຽນແປງອຸປະນິໄສຂອງພວກເຂົາເລີຍ. ນັ້ນຄືສະພາບຂອງມະນຸດໃນຍຸກແຫ່ງພຣະຄຸນ. ແລ້ວມະນຸດໄດ້ຮັບຄວາມລອດພົ້ນຢ່າງສົມບູນບໍ? ບໍ່! ສະນັ້ນຫລັງຈາກພາລະກິດຍຸກນັ້ນໄດ້ສິ້ນສຸດລົງ ກໍຍັງມີພາລະກິດຂອງການພິພາກສາ ແລະ ການຕີສອນ. ພາລະກິດຍຸກນີ້ແມ່ນເພື່ອເຮັດໃຫ້ມະນຸດບໍລິສຸດໂດຍວິທີທາງແຫ່ງພຣະທຳ ແລະ ເປັນການມອບຫົນທາງໃຫ້ມະນຸດປະຕິບັດຕາມ. ຍຸກນີ້ຈະບໍ່ມີຜົນປະໂຫຍດ ຫຼື ມີຄວາມໝາຍ ຖ້າຍັງມີການສືບຕໍ່ກຳຈັດມານຮ້າຍ ເພາະວ່າມັນຈະເຮັດໃຫ້ການລົບລ້າງທຳມະຊາດແຫ່ງຄວາມຜິດບາບຂອງມະນຸດລົ້ມເຫຼວ ແລະ ມະນຸດກໍຈະຢຸດຢູ່ໃນການໃຫ້ອະໄພບາບຂອງພວກເຂົາ. ໂດຍຜ່ານການຖວາຍບາບມະນຸດໄດ້ຮັບການໃຫ້ອະໄພຈາກຄວາມຜິດບາບຂອງພວກເຂົາ ນັ້ນກໍຄືຍ້ອນພາລະກິດຂອງການໄຖ່ບາບດ້ວຍການຄຶງເທິງໄມ້ກາງແຂນໄດ້ສິ້ນສຸດລົງ ແລະ ຍ້ອນພຣະເຈົ້າໄດ້ເອົາຊະນະຊາຕານ ມະນຸດຈຶ່ງໄດ້ຮັບການໃຫ້ອະໄພຄວາມຜິດບາບ. ແຕ່ອຸປະນິໄສທີ່ເສື່ອມຊາມຂອງມະນຸດຍັງຄົງເສື່ອມຊາມຢູ່ມະນຸດຍັງສາມາດສ້າງບາບ ແລະ ຕໍ່ຕ້ານພຣະເຈົ້າ ແລະ ພຣະເຈົ້າຍັງບໍ່ໄດ້ຖືກຮັບເອົາໂດຍມະນຸດ. ດ້ວຍເຫດນັ້ນ ໃນຂັ້ນຕອນນີ້ຂອງພາລະກິດ ພຣະເຈົ້າຈຶ່ງໃຊ້ພຣະທຳເພື່ອເປີດເຜີຍອຸປະນິໄສທີ່ເສື່ອມຊາມຂອງມະນຸດ ເພື່ອເຮັດໃຫ້ພວກເຂົາປະຕິບັດຕາມເສັ້ນທາງທີ່ຖືກຕ້ອງ. ຂັ້ນຕອນນີ້ແມ່ນມີຄວາມໝາຍກວ່າຂັ້ນຕອນທີ່ຜ່ານມາ ພ້ອມທັງມີຜົນປະໂຫຍດຫຼາຍກວ່າ ເພາະວ່າເປັນຍຸກແຫ່ງພຣະທຳທີ່ສະໜອງຊີວິດຂອງມະນຸດໂດຍກົງ ແລະ ເຮັດໃຫ້ອຸປະນິໄສຂອງມະນຸດໄດ້ຮັບການປ່ຽນແປງໃໝ່ທັງໝົດ; ເປັນຂັ້ນຕອນຂອງພາລະກິດທີ່ລະອຽດຂຶ້ນຫຼາຍ. ສະນັ້ນ ການບັງເກີດເປັນມະນຸດໃນຍຸກສຸດທ້າຍໄດ້ສຳເລັດຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ສຳເລັດແຜນການຄຸ້ມຄອງຂອງພຣະເຈົ້າຢ່າງສົມບູນເພື່ອຄວາມລອດພົ້ນຂອງມະນຸດ.

ການຊ່ວຍມະນຸດໃຫ້ລອດພົ້ນຂອງພຣະເຈົ້າບໍ່ໄດ້ປະຕິບັດໂດຍໃຊ້ວິທີການຂອງພຣະວິນຍານ

ແລະ ຕົວຕົນຂອງພຣະວິນຍານໂດຍກົງ, ຍ້ອນມະນຸດບໍ່ສາມາດສຳຜັດ ຫຼື ເຫັນພຣະວິນຍານຂອງພຣະອົງໄດ້ ຫຼື ມະນຸດບໍ່ສາມາດຫຍັບເຂົ້າໃກ້ໄດ້. ຖ້າພຣະອົງພະຍາຍາມຊ່ວຍມະນຸດໃຫ້ລອດພົ້ນໃນລັກສະນະຂອງພຣະວິນຍານ, ມະນຸດກໍຈະບໍ່ສາມາດຮັບເອົາຄວາມລອດພົ້ນຂອງພຣະອົງໄດ້. ຖ້າພຣະເຈົ້າບໍ່ໄດ້ສວມໃສ່ຮູບຮ່າງພາຍນອກຂອງມະນຸດທີ່ຖືກສ້າງ, ມັນກໍຈະບໍ່ມີທາງທີ່ມະນຸດຈະຮັບເອົາຄວາມລອດພົ້ນນີ້ໄດ້. ຍ້ອນມະນຸດບໍ່ມີຫົນທາງໃນການເຂົ້າຫາພຣະອົງ, ເຊັ່ນດຽວກັນ ບໍ່ມີຜູ້ໃດສາມາດເຂົ້າໃກ້ກ້ອນເມກຂອງພຣະເຢໂຮວາໄດ້. ມີພຽງການກາຍມາເປັນມະນຸດທີ່ຖືກສ້າງເທົ່ານັ້ນ, ນັ້ນກໍຄື ມີພຽງແຕ່ການເອົາພຣະທຳຂອງພຣະອົງສະຖິດເຂົ້າໃນຮ່າງກາຍຂອງມະນຸດທີ່ພຣະອົງບັງເກີດເຂົ້າສູ່ເທົ່ານັ້ນ ພຣະອົງຈຶ່ງຈະສາມາດປະຕິບັດພາລະກິດພຣະທຳໃນທຸກຄົນທີ່ຕິດຕາມພຣະອົງໄດ້ເປັນການສ່ວນຕົວ. ແລ້ວເມື່ອນັ້ນ ມະນຸດຈຶ່ງຈະສາມາດເຫັນ ແລະ ໄດ້ຍິນພຣະທຳຂອງພຣະອົງດ້ວຍຕົວເຂົາເອງ ແລະ ຍິ່ງໄປກວ່ານັ້ນກໍຈະໄດ້ເຂົ້າສູ່ການຄອບຄອງຂອງພຣະທຳຂອງພຣະອົງ ແລະ ດ້ວຍວິທີນີ້ຈຶ່ງຈະຖືກຊ່ວຍໃຫ້ລອດພົ້ນຢ່າງສົມບູນ. ຖ້າພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງ, ບໍ່ມີມະນຸດຄົນໃດທີ່ມາຈາກເນື້ອໜັງ ແລະ ເລືອດເນື້ອສາມາດຮັບເອົາຄວາມລອດພົ້ນອັນຍິ່ງໃຫຍ່ດັ່ງກ່າວນີ້ໄດ້ ຫຼື ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ຈະຖືກຊ່ວຍໃຫ້ລອດພົ້ນໄດ້. ຖ້າພຣະວິນຍານຂອງພຣະເຈົ້າປະຕິບັດພາລະກິດໂດຍກົງໃນທ່າມກາງມະນຸດ, ມະນຸດຊາດທັງປວງກໍຈະຖືກໂຈມຕີໃຫ້ລົ້ມລົງ ຫຼື ບໍ່ດັ່ງນັ້ນ ພວກເຂົາກໍບໍ່ມີທາງຈະໄດ້ສຳຜັດກັບພຣະເຈົ້າ, ພວກເຂົາຈະຖືກຊາຕານຈັບເປັນຊະເລີຍຢ່າງສົມບູນ. ການບັງເກີດຄັ້ງທີໜຶ່ງແມ່ນເພື່ອໄຖ່ມະນຸດໃຫ້ລອດພົ້ນຈາກຄວາມຜິດບາບ, ເພື່ອໄຖ່ບາບເຂົາໂດຍຜ່ານຮ່າງກາຍທີ່ເປັນເນື້ອໜັງຂອງພຣະເຢຊູ ນັ້ນກໍຄື ພຣະອົງຊ່ວຍມະນຸດໃຫ້ລອດພົ້ນຈາກໄມ້ກາງແຂນ, ແຕ່ອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມຍັງຄົງຢູ່ພາຍໃນມະນຸດ. ການບັງເກີດຄັ້ງທີສອງບໍ່ແມ່ນເພື່ອເຮັດໜ້າທີ່ເປັນເຄື່ອງບູຊາໄຖ່ບາບອີກຕໍ່ໄປ ແຕ່ກົງກັນຂ້າມ ມັນແມ່ນເພື່ອຊ່ວຍຄົນທີ່ຖືກໄຖ່ຈາກຄວາມຜິດບາບຢ່າງສົມບູນ. ເຮັດແບບນີ້ກໍເພື່ອວ່າຄົນທີ່ໄດ້ຮັບອະໄພໂທດຈະລອດພົ້ນຈາກຄວາມບາບຂອງພວກເຂົາ ແລະ ຄວາມຜິດບາບຂອງພວກເຂົາອາດຈະຖືກເຮັດໃຫ້ບໍລິສຸດຢ່າງສົມບູນ ແລະ ເພື່ອພວກເຂົາອາດຈະໄດ້ຮັບການປ່ຽນແປງທາງດ້ານອຸປະນິໄສ, ກາຍເປັນຄົນທີ່ລອດພົ້ນຈາກອິດທິພົນແຫ່ງຄວາມມືດຂອງຊາຕານ ແລະ ກັບຄືນມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ. ມີແຕ່ໃນວິທີນີ້ເທົ່ານັ້ນ ມະນຸດຈຶ່ງຈະໄດ້ພົ້ນຈາກບາບຢ່າງສົມບູນ. ຫຼັງຈາກຍຸກແຫ່ງພຣະບັນຍັດໄດ້ມາເຖິງຈຸດສິ້ນສຸດ ແລະ ເລີ່ມຕົ້ນຍຸກແຫ່ງພຣະຄຸນ, ພຣະເຈົ້າກໍເລີ່ມຕົ້ນພາລະກິດແຫ່ງຄວາມລອດພົ້ນ ເຊິ່ງສືບຕໍ່ຈົນເຖິງຍຸກສຸດທ້າຍທີ່ພຣະອົງຈະເຮັດໃຫ້ມະນຸດຊາດບໍລິສຸດຢ່າງສົມບູນຜ່ານການພິພາກສາ ແລະ ການຂ້ຽນຕີມະນຸດຊາດຍ້ອນຄວາມກະບົດຂອງພວກເຂົາ. ພຽງແຕ່ເມື່ອນັ້ນ ພຣະເຈົ້າຈຶ່ງຈະສິ້ນສຸດພາລະກິດແຫ່ງຄວາມລອດພົ້ນຂອງພຣະອົງ ແລະ ເຂົ້າສູ່ການພັກຜ່ອນ. ສະນັ້ນ ໃນທັງສາມຂັ້ນຕອນຂອງພາລະກິດ, ພຣະເຈົ້າກາຍມາເປັນເນື້ອໜັງພຽງແຕ່ສອງຄັ້ງເພື່ອປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດດ້ວຍຕົວພຣະອົງເອງ. ນັ້ນກໍເພາະວ່າ ມີພຽງໜຶ່ງໃນສາມຂັ້ນຕອນຂອງພາລະກິດເທົ່ານັ້ນທີ່ເປັນການນຳພາມະນຸດໃນການດຳລົງຊີວິດຂອງພວກເຂົາ, ໃນຂະນະທີ່ອີກສອງຂັ້ນຕອນປະກອບດ້ວຍພາລະກິດແຫ່ງຄວາມ

ລອດພົ້ນ. ມີພຽງແຕ່ການກາຍມາເປັນເນື້ອໜັງເທົ່ານັ້ນ ພຣະເຈົ້າຈຶ່ງສາມາດດຳລົງຊີວິດຢູ່ຄຽງຂ້າງກັບມະນຸດ, ຜະເຊີນກັບການທົນທຸກໃນໂລກ ແລະ ດຳລົງຊີວິດໃນຮ່າງກາຍເນື້ອໜັງທຳມະດາ. ມີພຽງແຕ່ໃນວິທີນີ້ເທົ່ານັ້ນ ພຣະອົງຈຶ່ງສາມາດສະໜອງຫົນທາງທີ່ເປັນຈິງໃຫ້ກັບມະນຸດໄດ້ ເຊິ່ງເປັນສິ່ງທີ່ພວກເຂົາຕ້ອງການໃນຖານະສິ່ງຖືກສ້າງ. ມັນແມ່ນຜ່ານການບັງເກີດເປັນມະນຸດຂອງພຣະເຈົ້າ ມະນຸດຈຶ່ງໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າຢ່າງສົມບູນ ແລະ ບໍ່ແມ່ນໄດ້ຮັບມາຈາກສະຫວັນໂດຍກົງຍ້ອນຄຳອະທິຖານຂອງເຂົາ. ເພາະວ່າມະນຸດມາຈາກເນື້ອໜັງ ແລະ ເລືອດ, ເຂົາຈຶ່ງບໍ່ມີທາງເຫັນພຣະວິນຍານຂອງພຣະເຈົ້າໄດ້, ແຮງໄກທີ່ເຂົາຈະເຂົ້າເຖິງພຣະວິນຍານຂອງພຣະອົງ. ສິ່ງທີ່ມະນຸດສຳຜັດລ້ວນແລ້ວແຕ່ເປັນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ມີພຽງແຕ່ວິທີນີ້ເທົ່ານັ້ນ ມະນຸດຈຶ່ງສາມາດເຂົ້າໃຈຫົນທາງທັງໝົດ ແລະ ຄວາມຈິງທັງໝົດ ແລະ ຮັບເອົາຄວາມລອດພົ້ນຢ່າງສົມບູນ. ການບັງເກີດຄັ້ງທີສອງແມ່ນພຽງພໍທີ່ຈະກຳຈັດຄວາມຜິດບາບຂອງມະນຸດ ແລະ ເພື່ອເຮັດໃຫ້ເຂົາບໍລິສຸດຢ່າງສົມບູນ. ສະນັ້ນ ຍ້ອນການບັງເກີດເປັນມະນຸດຄັ້ງທີສອງ ພາລະກິດທັງໝົດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງຈຶ່ງຈະນຳໄປສູ່ຈຸດສິ້ນສຸດ ແລະ ສຸດທ້າຍ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າກໍຈະຖືກເຮັດໃຫ້ສຳເລັດ. ຫຼັງຈາກນັ້ນ ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງກໍຈະສິ້ນສຸດລົງທັງໝົດ. ຫຼັງຈາກການເກີດເປັນມະນຸດຄັ້ງທີສອງ, ພຣະອົງຈະບໍ່ເກີດເປັນມະນຸດເປັນຄັ້ງທີສາມເພື່ອປະຕິບັດພາລະກິດຂອງພຣະອົງ. ນັ້ນກໍຍ້ອນວ່າ ການຄຸ້ມຄອງທັງໝົດຂອງພຣະອົງແມ່ນເຖິງຈຸດສິ້ນສຸດແລ້ວ. ການບັງເກີດເປັນມະນຸດໃນຍຸກສຸດທ້າຍແມ່ນການຮັບເອົາຄົນທີ່ພຣະອົງໄດ້ເລືອກໄວ້ຢ່າງສົມບູນ ແລະ ມະນຸດຊາດທັງປວງໃນຍຸກສຸດທ້າຍແມ່ນຈະຖືກແບ່ງອອກຕາມປະເພດຂອງພວກເຂົາ. ພຣະອົງຈະບໍ່ປະຕິບັດພາລະກິດແຫ່ງຄວາມລອດພົ້ນອີກຕໍ່ໄປ ຫຼື ພຣະອົງຈະບໍ່ກັບຄືນສູ່ເນື້ອໜັງເພື່ອປະຕິບັດພາລະກິດໃດໜຶ່ງອີກ. ໃນພາລະກິດຂອງຍຸກສຸດທ້າຍ, ພຣະທຳແມ່ນຍິ່ງໃຫຍ່ກວ່າການສະແດງໝາຍສຳຄັນ ແລະ ຄວາມອັດສະຈັນ ແລະ ສິດອຳນາດຂອງພຣະທຳກໍຢູ່ເໜືອໝາຍສຳຄັນ ແລະ ສິ່ງອັດສະຈັນທັງປວງ. ພຣະທຳເປີດໂປງອຸປະນິໄສທີ່ເສື່ອມຊາມທັງໝົດທີ່ຖືກຝັງເລິກຢູ່ໃນຫົວໃຈຂອງມະນຸດ. ເຈົ້າບໍ່ມີທາງຮູ້ສິ່ງເຫຼົ່ານັ້ນດ້ວຍຕົວເຈົ້າເອງໄດ້. ເມື່ອສິ່ງເຫຼົ່ານັ້ນຖືກເປີດເຜີຍອອກຕໍ່ໜ້າເຈົ້າຜ່ານພຣະທຳ, ເຈົ້າກໍຈະຄົ້ນພົບສິ່ງເຫຼົ່ານັ້ນໂດຍທຳມະຊາດ; ເຈົ້າຈະບໍ່ສາມາດປະຕິເສດສິ່ງເຫຼົ່ານັ້ນໄດ້ ແລະ ເຈົ້າກໍຈະເຊື່ອຢ່າງແທ້ຈິງ. ນີ້ບໍ່ແມ່ນສິດອຳນາດຂອງພຣະທຳບໍ? ນີ້ແມ່ນຜົນທີ່ພາລະກິດແຫ່ງພຣະທຳໄດ້ບັນລຸໃນປັດຈຸບັນ. ສະນັ້ນ ມັນບໍ່ແມ່ນຜ່ານການຮັກສາຄົນເຈັບປ່ວຍ ແລະ ການຂັບໄລ່ຜີຮ້າຍ ມະນຸດຈຶ່ງຈະຖືກຊ່ວຍໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາຢ່າງສົມບູນ ຫຼື ມັນບໍ່ແມ່ນຜ່ານການສະແດງໝາຍສຳຄັນ ແລະ ການເຮັດໃນສິ່ງອັດສະຈັນທີ່ພວກເຂົາສາມາດຖືກເຮັດໃຫ້ສົມບູນຢ່າງແທ້ຈິງໄດ້. ສິດອຳນາດໃນການຮັກສາຄວາມເຈັບປ່ວຍ ແລະ ການຂັບໄລ່ຜີຮ້າຍນັ້ນເປັນພຽງການໃຫ້ຄວາມເມດຕາກະລຸນາຕໍ່ມະນຸດເທົ່ານັ້ນ, ແຕ່ເນື້ອໜັງຂອງມະນຸດຍັງເປັນຂອງຊາຕານ ແລະ ອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມກໍຍັງຄົງຢູ່ພາຍໃນມະນຸດ. ເວົ້າອີກຢ່າງໜຶ່ງກໍຄື ສິ່ງທີ່ຍັງບໍ່ຖືກເຮັດໃຫ້ສະອາດກໍຍັງເປັນສ່ວນໜຶ່ງຂອງຄວາມຜິດບາບ ແລະ ຄວາມສົກກະປົກຢູ່. ມີພຽງແຕ່ຫຼັງຈາກທີ່ເຂົາຖືກເຮັດໃຫ້ບໍລິສຸດ

ຜ່ານການປະຕິບັດຂອງພຣະທຳ ເຂົາຈຶ່ງຈະສາມາດຖືກຮັບເອົາໂດຍພຣະເຈົ້າ ແລະ ກາຍມາເປັນມະນຸດທີ່ສັກສິດ. ເມື່ອມານຮ້າຍຖືກຂັບໄລ່ອອກຈາກມະນຸດ ແລະ ພວກເຂົາຖືກໄຖ່ບາບ, ສິ່ງນີ້ພຽງແຕ່ໝາຍຄວາມວ່າ ພວກເຂົາໄດ້ລອດພົ້ນຈາກມືຂອງຊາຕານ ແລະ ກັບຄືນສູ່ພຣະເຈົ້າ. ເຖິງຢ່າງໃດກໍຕາມ ຫາກປາສະຈາກການຖືກເຮັດໃຫ້ບໍລິສຸດ ຫຼື ຖືກປ່ຽນແປງໂດຍພຣະເຈົ້າ, ພວກເຂົາກໍຍັງຈະເປັນມະນຸດທີ່ເສື່ອມຊາມ. ພາຍໃນມະນຸດກໍຍັງຈະມີຄວາມສົກກະປົກ, ມີການຕໍ່ຕ້ານ ແລະ ກະບົດ; ມະນຸດພຽງແຕ່ກັບຄືນຫາພຣະເຈົ້າຜ່ານການໄຖ່ບາບຂອງພຣະອົງເທົ່ານັ້ນ, ແຕ່ເຂົາບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວກ່ຽວກັບພຣະເຈົ້າ ແລະ ຍັງສາມາດຕໍ່ຕ້ານ ແລະ ກະບົດຕໍ່ພຣະອົງ. ກ່ອນທີ່ມະນຸດຈະຖືກໄຖ່ບາບ, ພິດຫຼາຍຢ່າງຂອງຊາຕານຖືກຝັງເລິກພາຍໃນໃຈຂອງເຂົາແລ້ວ ແລະ ຫຼັງຈາກເວລາຫຼາຍພັນປີທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ, ສິ່ງນັ້ນກາຍເປັນທຳມະຊາດຢ່າງໝັ້ນຄົງຂອງມະນຸດໃນການຕໍ່ຕ້ານພຣະເຈົ້າ. ສະນັ້ນ ເມື່ອມະນຸດຖືກໄຖ່ບາບ, ມັນກໍບໍ່ຕ່າງຫຍັງຈາກການໄຖ່ບາບທີ່ມະນຸດໄດ້ຊື້ມາດ້ວຍລາຄາສູງ, ແຕ່ທຳມະຊາດທີ່ເປັນພິດຢູ່ພາຍໃນເຂົາແມ່ນບໍ່ໄດ້ຖືກກຳຈັດ. ມະນຸດທີ່ສົກກະປົກຫຼາຍຕ້ອງໄດ້ຜ່ານການປ່ຽນແປງກ່ອນພວກເຂົາຈະເໝາະສົມໃນການຮັບໃຊ້ພຣະເຈົ້າ. ດ້ວຍວິທີຂອງພາລະກິດແຫ່ງການພິພາກສາ ແລະ ການຂ້ຽນຕີນີ້, ມະນຸດຈະຮູ້ຈັກແກ່ນແທ້ທີ່ສົກກະປົກ ແລະ ເສື່ອມຊາມທີ່ຢູ່ພາຍໃນຕົວເຂົາເອງຢ່າງສົມບູນ ແລະ ເຂົາຈະສາມາດປ່ຽນແປງຢ່າງຄົບຖ້ວນ ແລະ ບໍລິສຸດຂຶ້ນ. ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈຶ່ງເໝາະສົມທີ່ຈະກັບຄືນມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ. ພາລະກິດທັງໝົດທີ່ປະຕິບັດໃນມື້ນີ້ແມ່ນເພື່ອໃຫ້ມະນຸດຖືກເຮັດໃຫ້ບໍລິສຸດ ແລະ ເພື່ອຮັບການປ່ຽນແປງ; ຜ່ານການພິພາກສາ ແລະ ການຂ້ຽນຕີຈາກພຣະທຳ ພ້ອມກັບຜ່ານການຫຼໍ່ຫຼອມ ມະນຸດສາມາດລົບລ້າງຄວາມເສື່ອມຊາມຂອງເຂົາ ແລະ ຖືກເຮັດໃຫ້ເປັນຄົນບໍລິສຸດ. ເຖິງແມ່ນວ່າ ຂັ້ນຕອນນີ້ຂອງພາລະກິດຈະຖືວ່າເປັນການຊ່ວຍໃຫ້ລອດພົ້ນ, ແຕ່ມັນອາດຈະເໝາະສົມກວ່າ ທີ່ຈະເວົ້າວ່າ ເປັນພາລະກິດແຫ່ງການຊຳລະລ້າງໃຫ້ບໍລິສຸດ. ໃນຄວາມຈິງແລ້ວ, ຂັ້ນຕອນນີ້ແມ່ນຂັ້ນຕອນຂອງການເອົາຊະນະ ເຊັ່ນກັນກັບຂັ້ນຕອນທີສອງໃນພາລະກິດແຫ່ງຄວາມລອດພົ້ນ. ຜ່ານການພິພາກສາ ແລະ ການຂ້ຽນຕີໂດຍພຣະທຳ ມະນຸດຈຶ່ງມາເຖິງຈຸດຖືກຮັບເອົາໂດຍພຣະເຈົ້າ; ແລະ ມັນແມ່ນຜ່ານການໃຊ້ພຣະທຳເພື່ອຫຼໍ່ຫຼອມ, ພິພາກສາ ແລະ ເປີດເຜີຍ ທຸກສິ່ງທີ່ບໍ່ບໍລິສຸດ, ແນວຄິດ, ແຮງຈູງໃຈ ແລະ ຄວາມປາຖະໜາພາຍໃນຫົວໃຈຂອງມະນຸດຈຶ່ງຖືກເປີດເຜີຍອອກຢ່າງຄົບຖ້ວນ. ສຳລັບທຸກສິ່ງທີ່ເຮັດໃຫ້ມະນຸດຖືກໄຖ່ໃຫ້ພົ້ນ ແລະ ໄດ້ຮັບອະໄພຄວາມຜິດບາບ, ສາມາດພິຈາລະນາໄດ້ວ່າ ພຣະເຈົ້າບໍ່ຈົດຈຳການລ່ວງລະເມີດຂອງມະນຸດ ແລະ ບໍ່ປະຕິບັດຕໍ່ມະນຸດຕາມການລ່ວງລະເມີດຂອງເຂົາ. ເຖິງຢ່າງໃດກໍຕາມ ເມື່ອມະນຸດທີ່ດຳລົງຊີວິດຢູ່ໃນຮ່າງກາຍຂອງເນື້ອໜັງບໍ່ໄດ້ເປັນອິດສະຫຼະຈາກຄວາມຜິດບາບ, ເຂົາກໍຈະສືບຕໍ່ສ້າງບາບ ແລະ ເປີດເຜີຍອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມຢ່າງບໍ່ມີວັນສິ້ນສຸດ. ນີ້ແມ່ນຊີວິດທີ່ມະນຸດໄດ້ດຳລົງຢູ່, ເປັນວົງຈອນຂອງການສ້າງບາບ ແລະ ໄດ້ຮັບອະໄພບາບຢ່າງບໍ່ສິ້ນສຸດ. ມະນຸດສ່ວນໃຫຍ່ສ້າງບາບໃນຕອນກາງເວັນ ແລ້ວກໍພາກັນສາລະພາບບາບໃນຕອນແລງ. ດ້ວຍເຫດນີ້, ເຖິງແມ່ນວ່າ ການຖວາຍຄວາມຜິດບາບຈະມີຜົນສຳລັບມະນຸດຕະຫຼອດໄປກໍຕາມ, ມັນກໍຈະບໍ່ສາມາດ

ຊ່ວຍໃຫ້ມະນຸດລອດພົ້ນຈາກຄວາມຜິດບາບໄດ້. ມີພຽງແຕ່ເຄິ່ງໜຶ່ງຂອງພາລະກິດແຫ່ງຄວາມລອດພົ້ນຖືກເຮັດໃຫ້ສຳເລັດ, ຍ້ອນມະນຸດຍັງມີອຸປະນິໄສທີ່ເສື່ອມຊາມ. ຕົວຢ່າງເຊັ່ນ ເມື່ອຜູ້ຄົນເຂົ້າໃຈວ່າ ພວກເຂົາສືບເຊື້ອສາຍມາຈາກໂມອາບ, ພວກເຂົາໄດ້ແຕ່ຕໍ່ວ່າ, ພາກັນເຊົາສະແຫວງຫາຊີວິດ ແລະ ເປັນກຸ່ມຄົນທີ່ຄິດລົບທີ່ສຸດ. ສິ່ງນີ້ບໍ່ໄດ້ສະແດງໃຫ້ເຫັນບໍວ່າ ມະນຸດຊາດບໍ່ສາມາດຍອມຢູ່ພາຍໃຕ້ອຳນາດຂອງພຣະເຈົ້າໄດ້ຢ່າງສົມບູນ? ນີ້ບໍ່ແມ່ນອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມຂອງພວກເຂົາແທ້ບໍ? ເມື່ອເຈົ້າບໍ່ໄດ້ຕົກຢູ່ພາຍໃຕ້ການຂ້ຽນຕີ, ພາຍໃຕ້ການພິພາກສາ, ເຈົ້າກໍຈະຍົກມືຂຶ້ນສູງກວ່າຄົນອື່ນ, ຍົກສູງກວ່າພຣະເຢຊູອີກ. ແລ້ວກໍພາກັນໂຮ່ຮ້ອງອອກມາຢ່າງແຮງວ່າ "ຈົ່ງເປັນບຸດຊາຍອັນເປັນທີ່ຮັກຂອງພຣະເຈົ້າ! ຈົ່ງເປັນມິດສະຫາຍຂອງພຣະເຈົ້າ! ພວກຂ້ານ້ອຍຈະຂໍຕາຍດີກວ່າກົ້ມຫົວລົງໃຫ້ກັບຊາຕານ! ຈົ່ງກະບົດຕໍ່ຊາຕານເຖົ້າ! ຈົ່ງກະບົດຕໍ່ມັງກອນແດງໃຫຍ່! ຂໍໃຫ້ມັງກອນແດງໃຫຍ່ສູນເສຍອຳນາດຢ່າງໜ້າສັງເວດ! ຂໍໃຫ້ພຣະເຈົ້າຈົ່ງເຮັດໃຫ້ພວກຂ້ານ້ອຍສົມບູນ!" ສຽງຮ້ອງໂຮ່ຂອງເຈົ້າແມ່ນກ້ອງດັງກວ່າຄົນອື່ນໆ. ແຕ່ເມື່ອເຖິງເວລາແຫ່ງການຂ້ຽນຕີ, ນິໄສອັນເສື່ອມຊາມຂອງມະນຸດຊາດກໍສະແດງອອກມາໃຫ້ເຫັນອີກຄັ້ງ. ສຽງຮ້ອງໂຮ່ຂອງພວກເຂົາກໍມິດລົງ ແລະ ຄວາມເດັດດ່ຽວຂອງພວກເຂົາກໍລົ້ມເຫຼວ. ນີ້ແມ່ນຄວາມເສື່ອມຊາມຂອງມະນຸດ ທີ່ຝັງເລິກກວ່າຄວາມຜິດບາບ, ມັນແມ່ນສິ່ງທີ່ຊາຕານໄດ້ປູກຝັງໄວ້ ແລະ ໄດ້ຝັງເລິກຢູ່ພາຍໃນມະນຸດ. ມັນບໍ່ງ່າຍທີ່ມະນຸດຈະມາຮູ້ຈັກກັບຄວາມຜິດບາບຂອງເຂົາ; ເຂົາບໍ່ມີທາງຮູ້ຈັກທຳມະຊາດທີ່ຝັງແໜ້ນໃນຕົວເຂົາ ແລະ ຕ້ອງເພິ່ງພາການພິພາກສາຂອງພຣະທຳເພື່ອບັນລຸຜົນນີ້. ມີພຽງແຕ່ດ້ວຍວິທີນີ້ ມະນຸດຈຶ່ງຈະຖືກປ່ຽນແປງເທື່ອລະໜ້ອຍຈາກຈຸດນີ້ເປັນຕົ້ນໄປ. ໃນອະດີດ ມະນຸດຮ້ອງຂຶ້ນແບບນັ້ນກໍເພາະວ່າເຂົາບໍ່ມີຄວາມເຂົ້າໃຈກ່ຽວກັບອຸປະນິໄສທີ່ເສື່ອມຊາມໂດຍທຳມະຊາດຂອງເຂົາ. ສິ່ງເຫຼົ່ານີ້ແມ່ນຄວາມບໍ່ບໍລິສຸດທີ່ມີຢູ່ພາຍໃນມະນຸດ. ທົ່ວທັງໄລຍະເວລາທີ່ຍາວນານແຫ່ງການພິພາກສາ ແລະ ການຂ້ຽນຕີ, ມະນຸດດຳລົງຊີວິດຢູ່ໃນບັນຍາກາດຄວາມຕຶງຄຽດ. ສິ່ງນີ້ລ້ວນແລ້ວແຕ່ບໍ່ໄດ້ຖືກບັນລຸຜ່ານການປະຕິບັດງານຂອງພຣະທຳບໍ? ເຈົ້າບໍ່ໄດ້ຮ້ອງອອກເປັນສຽງດັງກ່ອນການທົດລອງຂອງຜູ້ເຮັດບໍລິການບໍ? "ຈົ່ງເຂົ້າສູ່ອານາຈັກ! ທຸກຄົນທີ່ຍອມຮັບເອົານາມນີ້ຈະເຂົ້າສູ່ອານາຈັກ! ທຸກຄົນຈະມີສ່ວນຮ່ວມກັບພຣະເຈົ້າ!" ເມື່ອການທົດລອງຂອງຜູ້ເຮັດບໍລິການມາເຖິງ, ເຈົ້າຈະບໍ່ຮ້ອງອອກສຽງດັງອີກຕໍ່ໄປ. ໃນເບື້ອງຕົ້ນນັ້ນ, ທຸກຄົນຮ້ອງອອກມາວ່າ "ໂອພຣະເຈົ້າ! ບໍ່ວ່າພຣະອົງຈະວາງຂ້ານ້ອຍໄວ້ຢູ່ໃສກໍຕາມ, ຂ້ານ້ອຍຈະຍອມໃຫ້ພຣະອົງນຳພາ". ຫຼັງຈາກທີ່ໄດ້ອ່ານພຣະທຳຂອງພຣະເຈົ້າທີ່ວ່າ "ຜູ້ໃດຈະເປັນໂປໂລຂອງເຮົາ?" ມະນຸດກໍເວົ້າວ່າ "ຂ້ານ້ອຍເຕັມໃຈ!" ແລ້ວເຂົາກໍເຫັນພຣະທຳທີ່ວ່າ "ແລ້ວຄວາມເຊື່ອຂອງໂຢບເດ?" ແລະເວົ້າວ່າ "ຂ້ານ້ອຍເຕັມໃຈທີ່ຈະຮັບເອົາຄວາມເຊື່ອຂອງໂຢບ. ພຣະເຈົ້າກະລຸນາທົດສອບຂ້ານ້ອຍດ້ວຍເຖີດ!" ເມື່ອການທົດລອງຂອງຜູ້ເຮັດບໍລິການມາເຖິງ, ເຂົາກໍລົ້ມລົງທັນທີ ແລະ ເກືອບບໍ່ສາມາດລຸກຂຶ້ນອີກຄັ້ງ. ຫຼັງຈາກນັ້ນ ຄວາມບໍ່ບໍລິສຸດທີ່ຢູ່ໃນຫົວໃຈຂອງມະນຸດກໍຫຼຸດລົງເທື່ອລະໜ້ອຍ. ສິ່ງນີ້ບໍ່ແມ່ນຖືກບັນລຸຜົນຜ່ານທາງພຣະທຳບໍ? ດັ່ງນັ້ນ ສິ່ງທີ່ພວກເຈົ້າໄດ້ຜະເຊີນໃນປັດຈຸບັນນີ້ ແມ່ນຜົນສຳເລັດຜ່ານທາງພຣະທຳ, ເຊິ່ງຍິ່ງໃຫຍ່ກວ່າສິ່ງທີ່ຜູ້ຄົນໄດ້ຮັບຜ່ານການສະແດງໝາຍສຳຄັນ ແລະ ສິ່ງ

ອັດສະຈັນຂອງພຣະເຢຊູ. ຄວາມສະຫງ່າລາສີຂອງພຣະເຈົ້າທີ່ເຈົ້າເຫັນ ແລະ ສິດອຳນາດຂອງພຣະເຈົ້າທີ່ເຈົ້າເຫັນບໍ່ແມ່ນພຽງເຫັນຈາກວິທີການຄຶງໃສ່ໄມ້ກາງແຂນ, ຈາກວິທີແຫ່ງການຮັກສາຄວາມເຈັບປ່ວຍ ແລະ ການຂັບໄລ່ຜີຮ້າຍ, ແຕ່ໄດ້ເຫັນດ້ວຍວິທີແຫ່ງການພິພາກສາຈາກພຣະທຳຂອງພຣະອົງ. ສິ່ງນີ້ສະແດງໃຫ້ເຈົ້າເຫັນວ່າ ສິດອຳນາດ ແລະ ລິດທານຸພາບຂອງພຣະເຈົ້າບໍ່ໄດ້ປະກອບດ້ວຍການສ້າງໝາຍສຳຄັນ, ການຮັກສາຄວາມເຈັບປ່ວຍ ແລະ ການຂັບໄລ່ມານຮ້າຍ, ແຕ່ປະກອບດ້ວຍການພິພາກສາໂດຍພຣະທຳເຊິ່ງເປັນວິທີການທີ່ສາມາດເປັນຕົວແທນໃຫ້ກັບສິດອຳນາດຂອງພຣະເຈົ້າ ແລະ ເປີດເຜີຍຄວາມຊົງລິດທານຸພາບສູງສຸດຂອງພຣະອົງໄດ້ດີກວ່າ.

ສິ່ງທີ່ມະນຸດໄດ້ບັນລຸໃນປັດຈຸບັນ, ວຸດທິພາວະ, ຄວາມຮູ້, ຄວາມຮັກ, ຄວາມຊື່ສັດ, ຄວາມເຊື່ອຟັງ ແລະ ຄວາມເຂົ້າໃຈໃນປັດຈຸບັນຂອງເຂົາ, ສິ່ງເຫຼົ່ານີ້ແມ່ນຜົນມາຈາກການພິພາກສາຂອງພຣະທຳ. ການທີ່ເຈົ້າສາມາດມີຄວາມຊື່ສັດ ແລະ ຍັງຄົງຢືນຢູ່ຈົນເຖິງທຸກມື້ນີ້ກໍແມ່ນມາຈາກການປະຕິບັດຂອງພຣະທຳ. ບັດນີ້ ມະນຸດເຫັນວ່າພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນພິເສດແທ້ໆ ແລະ ມີຫຼາຍສິ່ງໃນພາລະກິດດັ່ງກ່າວນັ້ນທີ່ມະນຸດບໍ່ສາມາດບັນລຸໄດ້; ສິ່ງເຫຼົ່ານີ້ແມ່ນຄວາມເລິກລັບ ແລະ ການອັດສະຈັນ. ສະນັ້ນ ຫຼາຍຄົນຈຶ່ງຍອມຈຳນົນ. ບາງຄົນບໍ່ເຄີຍຍອມຕໍ່ມະນຸດຄົນໃດຈັກເທື່ອຕັ້ງແຕ່ມື້ເກີດຂອງພວກເຂົາ, ແຕ່ເມື່ອພວກເຂົາໄດ້ເຫັນພຣະທຳຂອງພຣະເຈົ້າໃນມື້ນີ້ ພວກເຂົາກໍຍອມຢ່າງສົມບູນໂດຍບໍ່ຮູ້ສຶກຕົວ ແລະ ບໍ່ກ້າກວດສອບ ຫຼື ເວົ້າສິ່ງອື່ນໆອີກ. ມະນຸດຊາດໄດ້ຕົກຢູ່ພາຍໃຕ້ພຣະທຳ ແລະ ນອນກາບລົງພາຍໃຕ້ການພິພາກສາຂອງພຣະທຳ. ຖ້າພຣະວິນຍານຂອງພຣະເຈົ້າກ່າວຕໍ່ມະນຸດໂດຍກົງ, ແລ້ວມະນຸດທຸກຄົນກໍຍິນຍອມຕໍ່ສຽງຂອງພຣະອົງ ແລະ ກົ້ມຫົວລົ້ມລົງໂດຍບໍ່ມີການເປີດເຜີຍຂໍ້ພຣະທຳໃດໆ ຄ້າຍຄືກັບທີ່ໂປໂລລົ້ມລົງຂາບພື້ນພາຍໃຕ້ແສງສະຫວ່າງໃນຫົນທາງໄປສູ່ເມືອງດາມັດກັດ. ຖ້າພຣະເຈົ້າສືບຕໍ່ປະຕິບັດພາລະກິດແບບນີ້, ມະນຸດກໍຈະບໍ່ສາມາດຮູ້ຈັກຄວາມເສື່ອມຊາມຂອງເຂົາເອງຜ່ານທາງການພິພາກສາໂດຍພຣະທຳ ແລະ ກໍບໍ່ສາມາດຮັບເອົາຄວາມລອດພົ້ນໄດ້. ມີພຽງແຕ່ໂດຍການກາຍມາເປັນເນື້ອໜັງ ພຣະອົງຈຶ່ງສາມາດກ່າວພຣະທຳຂອງພຣະອົງເຂົ້າໃສ່ຫູຂອງມະນຸດແຕ່ລະຄົນດ້ວຍຕົວພຣະອົງເອງໄດ້, ເພື່ອວ່າທຸກຄົນທີ່ມີຫູກໍຈະໄດ້ຍິນພຣະທຳຂອງພຣະອົງ ແລະ ຮັບເອົາພາລະກິດແຫ່ງການພິພາກສາໂດຍພຣະທຳຂອງພຣະອົງ. ມີພຽງແຕ່ດ້ວຍວິທີນີ້ຈຶ່ງຈະໄດ້ຮັບຜົນຈາກພຣະທຳຂອງພຣະອົງ, ແທນທີ່ຈະໃຫ້ພຣະວິນຍານປາກົດຕົວຂຶ້ນເພື່ອເຮັດໃຫ້ມະນຸດຢ້ານຈົນຍອມຈຳນົນ. ມີພຽງຜ່ານທາງພາລະກິດຕົວຈິງ ແລະ ພິເສດນີ້ເທົ່ານັ້ນອຸປະນິໄສເກົ່າຂອງມະນຸດ ທີ່ຝັງເລິກຢູ່ພາຍໃນເປັນເວລາຫຼາຍປີ ຈຶ່ງຈະສາມາດຖືກເປີດເຜີຍຢ່າງສົມບູນ, ເພື່ອວ່າມະນຸດຈະຮູ້ຈັກສິ່ງນັ້ນ ແລະ ປ່ຽນແປງມັນ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນພາລະກິດຕົວຈິງຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ເຊິ່ງພຣະອົງຈະບັນລຸຜົນແຫ່ງການພິພາກສາຕໍ່ມະນຸດໂດຍພຣະທຳ ດ້ວຍການເວົ້າ ແລະ ການປະຕິບັດການພິພາກສາໃນລັກສະນະຕົວຈິງ. ນີ້ແມ່ນສິດອຳນາດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ມັນຖືກປະຕິບັດເພື່ອເຮັດໃຫ້ສິດອຳນາດຂອງພຣະເຈົ້າທີ່ບັງເກີດເປັນມະນຸດເປັນທີ່ຮູ້ຈັກ, ເພື່ອເຮັດໃຫ້ຜົນ

ຮັບທີ່ມາຈາກພາລະກິດແຫ່ງພຣະທຳເປັນທີ່ຮູ້ຈັກ ແລະ ເພື່ອເຮັດໃຫ້ເປັນທີ່ຮູ້ຈັກວ່າພຣະວິນຍານໄດ້ມາຢູ່ໃນເນື້ອໜັງ ແລະ ສະແດງລິດອຳນາດຂອງພຣະອົງຜ່ານການພິພາກສາມະນຸດໂດຍພຣະທຳ. ເຖິງແມ່ນເນື້ອໜັງຂອງພຣະອົງເປັນຮູບລັກສະນະພາຍນອກຂອງຄວາມເປັນມະນຸດທີ່ປົກກະຕິ ແລະ ທຳມະດາ, ແຕ່ສິ່ງນັ້ນກໍຄືຜົນຮັບມາຈາກພຣະທຳຂອງພຣະອົງ ເພື່ອສະແດງໃຫ້ມະນຸດເຫັນວ່າ ພຣະອົງເຕັມໄປດ້ວຍລິດອຳນາດ, ພຣະອົງເປັນພຣະເຈົ້າເອງ ແລະ ພຣະທຳຂອງພຣະອົງເປັນການສະແດງອອກຂອງພຣະອົງເອງ. ດ້ວຍສິ່ງນີ້ ມະນຸດຊາດທັງປວງກໍຈະໄດ້ເຫັນວ່າພຣະອົງເປັນພຣະເຈົ້າ, ພຣະອົງເປັນພຣະເຈົ້າທີ່ກາຍມາເປັນເນື້ອໜັງ ແລະ ບໍ່ມີໃຜສາມາດລ່ວງເກີນພຣະອົງໄດ້ ແລະ ບໍ່ມີໃຜສາມາດຢູ່ເໜືອການພິພາກສາໂດຍພຣະທຳຂອງພຣະອົງ ແລະ ບໍ່ມີກອງກຳລັງແຫ່ງຄວາມມືດໃດສາມາດເອົາຊະນະລິດອຳນາດຂອງພຣະອົງໄດ້. ມະນຸດຍອມພຣະອົງທັງໝົດກໍເພາະວ່າພຣະອົງເປັນພຣະທຳທີ່ກາຍມາເປັນເນື້ອໜັງ, ຍ້ອນລິດອຳນາດຂອງພຣະອົງ ແລະ ຍ້ອນການພິພາກສາໂດຍພຣະທຳຂອງພຣະອົງ. ພາລະກິດຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງໄດ້ນຳມາລິດອຳນາດທີ່ພຣະອົງມີ. ເຫດຜົນທີ່ວ່າ ເປັນຫຍັງພຣະອົງຈຶ່ງກາຍມາເປັນເນື້ອໜັງກໍຍ້ອນເນື້ອໜັງຍັງສາມາດມີສິດອຳນາດ ແລະ ພຣະອົງກໍສາມາດປະຕິບັດພາລະກິດໃນລັກສະນະຕົວຈິງທ່າມກາງມະນຸດຊາດ, ໃນລັກສະນະທີ່ມະນຸດສາມາດເຫັນ ແລະ ຈັບຕ້ອງໄດ້. ພາລະກິດນີ້ແມ່ນເປັນຈິງຫຼາຍກວ່າພາລະກິດທີ່ພຣະວິນຍານຂອງພຣະເຈົ້າປະຕິບັດໂດຍກົງ ຜູ້ເຊິ່ງມີສິດອຳນາດທັງໝົດ ແລະ ຜົນຕາມມາຂອງພາລະກິດນັ້ນກໍເຫັນໄດ້ຢ່າງຊັດເຈນ. ນີ້ກໍຍ້ອນວ່າ ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າສາມາດເວົ້າ ແລະ ປະຕິບັດພາລະກິດໃນລັກສະນະຕົວຈິງ. ຮູບຮ່າງພາຍນອກຂອງເນື້ອໜັງຂອງພຣະອົງບໍ່ມີລິດອຳນາດ ແລະ ມະນຸດກໍ່ສາມາດເຂົ້າເຖິງໄດ້, ໃນຂະນະທີ່ແກ່ນແທ້ຂອງພຣະອົງມີລິດອຳນາດ, ແຕ່ບໍ່ມີໃຜສາມາດເຫັນລິດອຳນາດຂອງພຣະອົງໄດ້. ເມື່ອພຣະອົງກ່າວ ແລະ ປະຕິບັດພາລະກິດ, ມະນຸດບໍ່ສາມາດກວດພົບລິດອຳນາດຂອງພຣະອົງໄດ້; ສິ່ງນີ້ຊ່ວຍໃຫ້ພຣະອົງປະຕິບັດພາລະກິດຢ່າງເປັນທຳຊາດແທ້ຈິງ. ແລ້ວພາລະກິດທີ່ເປັນຈິງທັງໝົດນີ້ແມ່ນສາມາດບັນລຸຜົນໄດ້ຢ່າງສົມບູນ. ເຖິງແມ່ນບໍ່ມີໃຜຮູ້ວ່າພຣະອົງມີລິດອຳນາດ ຫຼື ເຫັນວ່າພຣະອົງບໍ່ຄວນຖືກລ່ວງເກີນ ຫຼື ເຫັນເຖິງຄວາມໂກດຮ້າຍຂອງພຣະອົງ, ພຣະອົງກໍບັນລຸຜົນຕາມເຈດຕະນາຂອງພຣະທຳຂອງພຣະອົງຜ່ານລິດອຳນາດທີ່ລີ້ລັບຂອງພຣະອົງ, ຜ່ານຄວາມໂກດຮ້າຍທີ່ລີ້ລັບຂອງພຣະອົງ ແລະ ຜ່ານພຣະທຳທີ່ພຣະອົງກ່າວຢ່າງເປີດເຜີຍ. ເວົ້າອີກຢ່າງໜຶ່ງກໍຄື ຜ່ານທາງນໍ້າສຽງຂອງພຣະອົງ, ຄວາມເດັດຂາດຂອງຖ້ອຍຄຳຂອງພຣະອົງ ແລະ ສະຕິປັນຍາທັງໝົດຂອງພຣະທຳຂອງພຣະອົງ, ມະນຸດຈຶ່ງພາກັນເຊື່ອຢ່າງສິ້ນເຊີງ. ໃນລັກສະນະນີ້ ມະນຸດຍອມອ່ອນນ້ອມຕໍ່ພຣະທຳຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ຜູ້ທີ່ເບິ່ງຄືວ່າ ບໍ່ມີລິດອຳນາດ, ດ້ວຍເຫດນັ້ນຈຶ່ງບັນລຸຕາມເປົ້າໝາຍຂອງພຣະເຈົ້າໃນການຊ່ວຍມະນຸດໃຫ້ລອດພົ້ນ. ນີ້ແມ່ນອີກດ້ານໜຶ່ງຂອງຄວາມໝາຍຂອງການບັງເກີດເປັນມະນຸດ: ເພື່ອກ່າວຢ່າງເປັນຈິງຫຼາຍຂຶ້ນ ແລະ ປ່ອຍໃຫ້ຄວາມເປັນຈິງແຫ່ງພຣະທຳຂອງພຣະອົງມີຜົນສະທ້ອນໃນມະນຸດ, ເພື່ອວ່າ ມະນຸດຈະໄດ້ເປັນພະຍານເຖິງລິດອຳນາດແຫ່ງພຣະທຳຂອງພຣະເຈົ້າ. ສະນັ້ນ ພາລະກິດນີ້ ຖ້າບໍ່ຖືກປະຕິບັດຜ່ານການບັງເກີດເປັນ

ມະນຸດ ມັນກໍຈະບໍ່ສາມາດບັນລຸຜົນໄດ້ແມ່ນແຕ່ໜ້ອຍດຽວ ແລະ ບໍ່ສາມາດຊ່ວຍຄົນພົດບາບໃຫ້ລອດພົ້ນໄດ້ຢ່າງສົມບູນ. ຖ້າພຣະເຈົ້າບໍ່ກາຍມາເປັນເນື້ອໜັງ, ພຣະອົງກໍຈະຍັງຄົງເປັນພຣະວິນຍານທີ່ມະນຸດບໍ່ສາມາດເຫັນ ແລະ ຈັບຕ້ອງໄດ້. ຍ້ອນມະນຸດເປັນສິ່ງທີ່ສ້າງຈາກເນື້ອໜັງ, ເຂົາ ແລະ ພຣະເຈົ້າຈຶ່ງຢູ່ໃນໂລກສອງໂລກທີ່ແຕກຕ່າງກັນ ແລະ ມີທຳມະຊາດທີ່ແຕກຕ່າງກັນ. ພຣະວິນຍານຂອງພຣະເຈົ້າບໍ່ສາມາດເຂົ້າກັນກັບມະນຸດໄດ້ ຜູ້ທີ່ມີເນື້ອໜັງ ແລະ ບໍ່ມີທາງທີ່ຈະສ້າງຄວາມສຳພັນລະຫວ່າງພວກເຂົາໄດ້, ສ່ວນທີ່ວ່າມະນຸດບໍ່ສາມາດກາຍເປັນວິນຍານໄດ້ນັ້ນ ແມ່ນບໍ່ຕ້ອງເວົ້າເຖິງ. ເມື່ອເປັນແບບນີ້ ພຣະວິນຍານຂອງພຣະເຈົ້າກໍຕ້ອງກາຍມາເປັນສິ່ງທີ່ຖືກສ້າງເພື່ອປະຕິບັດພາລະກິດເດີມຂອງພຣະອົງ. ພຣະເຈົ້າສາມາດຂຶ້ນເມືອຍັງສະຖານທີ່ໆສູງທີ່ສຸດ ແລະ ຖ່ອມຕົວພຣະອົງລົງມາເພື່ອກາຍເປັນມະນຸດທີ່ຖືກສ້າງ, ປະຕິບັດພາລະກິດທ່າມກາງມະນຸດ ແລະ ດຳລົງຊີວິດຢູ່ທ່າມກາງພວກເຂົາ, ແຕ່ມະນຸດບໍ່ສາມາດຂຶ້ນເມືອສະຖານທີ່ໆສູງທີ່ສຸດ ແລະ ກາຍມາເປັນວິນຍານ ແລະ ແຮງໄກທີ່ເຂົາຈະສາມາດລົງໄປສູ່ສະຖານທີ່ໆຕໍ່າທີ່ສຸດ. ນີ້ຄືເຫດຜົນທີ່ວ່າເປັນຫຍັງພຣະເຈົ້າຈຶ່ງຕ້ອງກາຍມາເປັນເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງ. ເຊັ່ນດຽວກັນ ໃນລະຫວ່າງການບັງເກີດເປັນມະນຸດຄັ້ງທຳອິດມີພຽງແຕ່ເນື້ອໜັງທີ່ບັງເກີດເປັນມະນຸດເທົ່ານັ້ນທີ່ສາມາດໄຖ່ມະນຸດຜ່ານການຄຶງໃສ່ໄມ້ກາງແຂນໄດ້, ເພາະວ່າ ບໍ່ມີທາງທີ່ຈະສາມາດຄຶງພຣະວິນຍານຂອງພຣະເຈົ້າໃສ່ໄມ້ກາງແຂນເພື່ອເປັນເຄື່ອງຖວາຍບູຊາບາບໃຫ້ກັບມະນຸດໄດ້. ພຣະເຈົ້າສາມາດກາຍມາເປັນເນື້ອໜັງໂດຍກົງເພື່ອເຮັດໜ້າທີ່ເປັນເຄື່ອງຖວາຍບູຊາບາບໃຫ້ກັບມະນຸດ, ແຕ່ມະນຸດບໍ່ສາມາດຂຶ້ນເມືອສະຫວັນໂດຍກົງເພື່ອຮັບເອົາເຄື່ອງຖວາຍບູຊາບາບທີ່ພຣະເຈົ້າໄດ້ຈັດກຽມໄວ້ໃຫ້ເຂົາ. ເມື່ອເປັນດັ່ງນີ້ ສິ່ງທີ່ເປັນໄປໄດ້ກໍຄືໃຫ້ພຣະເຈົ້າສະເດັດໄປມາສອງສາມຄັ້ງລະຫວ່າງສະຫວັນ ແລະ ແຜ່ນດິນໂລກ, ບໍ່ໃຫ້ມະນຸດຂຶ້ນເມືອສະຫວັນເພື່ອຮັບເອົາຄວາມລອດພົ້ນນີ້, ຍ້ອນມະນຸດໄດ້ຫຼົ້ມຈົມ ແລະ ຍິ່ງໄປກວ່ານັ້ນ ມະນຸດບໍ່ສາມາດຂຶ້ນເມືອສະຫວັນໄດ້ຢ່າງແນ່ນອນ ແລ້ວແຮງໄກທີ່ຈະຮັບເອົາເຄື່ອງຖວາຍບູຊາບາບ. ສະນັ້ນ ມັນຈຶ່ງຈຳເປັນຕ້ອງໃຫ້ພຣະເຢຊູສະເດັດມາຢູ່ທ່າມກາງມະນຸດ ແລະ ປະຕິບັດພາລະກິດທີ່ມະນຸດບໍ່ສາມາດເຮັດໃຫ້ສຳເລັດໄດ້. ທຸກຄັ້ງທີ່ພຣະເຈົ້າກາຍມາເປັນເນື້ອໜັງແມ່ນເກີດຈາກຄວາມຈຳເປັນ. ຖ້າຂັ້ນຕອນໃດໜຶ່ງຖືກປະຕິບັດໂດຍພຣະວິນຍານຂອງພຣະເຈົ້າໂດຍກົງ, ພຣະອົງກໍຈະບໍ່ຍອມຕໍ່ຄວາມອັບອາຍໃນການບັງເກີດເປັນມະນຸດເຊັ່ນນີ້.

ໃນຂັ້ນຕອນສຸດທ້າຍຂອງພາລະກິດ, ຜົນແມ່ນຖືກບັນລຸຜ່ານພຣະທຳ. ຜ່ານທາງພຣະທຳ, ມະນຸດຈຶ່ງໄດ້ເຂົ້າໃຈຄວາມເລິກລັບຫຼາຍຢ່າງ ແລະ ພາລະກິດທີ່ພຣະເຈົ້າໄດ້ປະຕິບັດຜ່ານຄົນຮຸ່ນອະດີດ; ຜ່ານທາງພຣະທຳ, ມະນຸດຈຶ່ງໄດ້ຮັບແສງສະຫວ່າງໂດຍພຣະວິນຍານບໍລິສຸດ; ຜ່ານພຣະທຳ, ມະນຸດຈຶ່ງເຂົ້າໃຈຄວາມເລິກລັບຕ່າງໆທີ່ຄົນຮຸ່ນຜ່ານມາບໍ່ເຄີຍເປີດເຜີຍໄດ້ຈັກເທື່ອ ພ້ອມທັງພາລະກິດຂອງຜູ້ປະກາດພຣະທຳ ແລະ ອັກຄະສາວົກໃນອະດີດ ແລະ ຫຼັກການທີ່ພວກເຂົາປະຕິບັດພາລະກິດກໍລ້ວນແລ້ວແຕ່ຜ່ານທາງພຣະທຳ; ຜ່ານທາງພຣະທຳ ມະນຸດຈຶ່ງເຂົ້າໃຈເຖິງອຸປະນິໄສຂອງພຣະເຈົ້າພ້ອມທັງເຂົ້າໃຈຄວາມກະບົດ ແລະ ການຕໍ່ຕ້ານຂອງມະນຸດ ແລະ ເຂົາມາຮູ້ຈັກທາດແທ້ຂອງຕົນເອງ.

ຜ່ານທາງຂັ້ນຕອນເຫຼົ່ານີ້ຂອງພາລະກິດ ແລະ ຜ່ານທາງພຣະທຳທັງໝົດທີ່ໄດ້ກ່າວອອກມາ, ມະນຸດຈຶ່ງມາເຂົ້າໃຈພາລະກິດຂອງພຣະວິນຍານ, ເຂົ້າໃຈພາລະກິດຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າໄດ້ປະຕິບັດ ແລະ ຍິ່ງໄປກວ່ານັ້ນກໍຄື ເຂົ້າໃຈອຸປະນິໄສທັງໝົດຂອງພຣະອົງ. ຄວາມຮູ້ຂອງເຈົ້າກ່ຽວກັບພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າໃນຫົກພັນປີຍັງຖືກໄດ້ຮັບຜ່ານທາງພຣະທຳ. ຄວາມຮູ້ກ່ຽວກັບແນວຄິດຜ່ານມາຂອງເຈົ້າ ແລະ ຄວາມສຳເລັດໃນການປະຖິ້ມແນວຄິດດັ່ງກ່າວນັ້ນກໍບໍ່ແມ່ນຍ້ອນພຣະທຳບໍ? ໃນຂັ້ນຕອນທີ່ຜ່ານມາ, ພຣະເຢຊູສ້າງໝາຍສຳຄັນ ແລະ ສິ່ງອັດສະຈັນ, ແຕ່ໃນຂັ້ນຕອນນີ້ແມ່ນບໍ່ມີໝາຍສຳຄັນ ແລະ ສິ່ງອັດສະຈັນໃດໆ. ຄວາມເຂົ້າໃຈຂອງເຈົ້າທີ່ວ່າ ເປັນຫຍັງພຣະອົງຈຶ່ງບໍ່ເປີດເຜີຍໝາຍສຳຄັນ ແລະ ສິ່ງອັດສະຈັນ ແມ່ນບໍ່ໄດ້ຖືກບັນລຸຜ່ານທາງພຣະທຳເຊັ່ນກັນບໍ? ສະນັ້ນ ພຣະທຳທີ່ກ່າວໃນຂັ້ນຕອນນີ້ຈຶ່ງຢູ່ເໜືອພາລະກິດທີ່ອັກຄະສາວົກ ແລະ ຜູ້ປະກາດພຣະທຳໃນຍຸກອະດີດປະຕິບັດກັນ. ແມ່ນແຕ່ການທຳນາຍຂອງຜູ້ປະກາດພຣະທຳທີ່ໄດ້ທຳນາຍໄວ້ກໍບໍ່ສາມາດບັນລຸຜົນນີ້ໄດ້. ຜູ້ປະກາດພຣະທຳກ່າວພຽງແຕ່ຄຳທຳນາຍ, ພວກເຂົາກ່າວເຖິງສິ່ງທີ່ຈະເກີດຂຶ້ນໃນອະນາຄົດ, ແຕ່ບໍ່ແມ່ນກ່ຽວກັບພາລະກິດທີ່ພຣະເຈົ້າປາຖະໜາຈະປະຕິບັດໃນເວລານັ້ນ ຫຼື ພວກເຂົາບໍ່ໄດ້ກ່າວເພື່ອນຳພາຊີວິດມະນຸດ ຫຼື ເພື່ອມອບຄວາມຈິງໃຫ້ກັບມະນຸດ ຫຼື ເພື່ອເປີດເຜີຍຄວາມເລິກລັບໃຫ້ກັບພວກເຂົາ, ແລ້ວແຮງໄກທີ່ພວກເຂົາຈະມອບຊີວິດໃຫ້ກັບມະນຸດ. ຈາກບັນດາພຣະທຳທີ່ໄດ້ກ່າວໃນຂັ້ນຕອນນີ້, ມີການທຳນາຍ ແລະ ຄວາມຈິງ, ແຕ່ພຣະທຳເຫຼົ່ານີ້ແມ່ນເຮັດໜ້າທີ່ເພື່ອມອບຊີວິດໃຫ້ກັບມະນຸດເປັນຫຼັກ. ພຣະທຳໃນປັດຈຸບັນບໍ່ຄືກັນກັບຄຳທຳນາຍຂອງຜູ້ປະກາດພຣະທຳ. ນີ້ແມ່ນຂັ້ນຕອນຂອງພາລະກິດສຳລັບຊີວິດຂອງມະນຸດ, ເພື່ອປ່ຽນແປງອຸປະນິໄສຂອງມະນຸດ ແລະ ບໍ່ແມ່ນເພື່ອກ່າວຄຳທຳນາຍ. ຂັ້ນຕອນທຳອິດແມ່ນພາລະກິດຂອງພຣະເຢໂຮວາ: ພາລະກິດຂອງພຣະອົງແມ່ນເພື່ອຈັດກຽມເສັ້ນທາງໃຫ້ມະນຸດໄດ້ນະມັດສະການພຣະເຈົ້າເທິງແຜ່ນດິນໂລກ. ມັນແມ່ນພາລະກິດແຫ່ງການເລີ່ມຕົ້ນເພື່ອຄົ້ນຫາແຫຼ່ງກຳເນີດຂອງພາລະກິດເທິງແຜ່ນດິນໂລກ. ໃນເວລານັ້ນພຣະເຢໂຮວາສັ່ງສອນຊາວອິດສະຣາເອນໃຫ້ຮັກສາວັນຊະບາໂຕ, ນັບຖືພໍ່ແມ່ຂອງພວກເຂົາ ແລະດຳລົງຊີວິດຮ່ວມກັນຢ່າງສະຫງົບສຸກ. ນີ້ກໍຍ້ອນວ່າ ມະນຸດໃນເວລານັ້ນບໍ່ເຂົ້າໃຈສິ່ງທີ່ເປັນມະນຸດ ຫຼືພວກເຂົາບໍ່ເຂົ້າໃຈວິທີການດຳລົງຊີວິດເທິງແຜ່ນດິນໂລກ. ມັນຈຳເປັນສຳລັບພຣະອົງໃນຂັ້ນຕອນທຳອິດຂອງພາລະກິດທີ່ຕ້ອງໄດ້ນຳພາມະນຸດໃນການດຳລົງຊີວິດຂອງພວກເຂົາ. ທຸກສິ່ງທີ່ພຣະເຢໂຮວາກ່າວກັບພວກເຂົາແມ່ນບໍ່ໄດ້ເປັນທີ່ຮູ້ຈັກຕໍ່ມະນຸດຊາດມາກ່ອນ ຫຼື ບໍ່ເຄີຍໄດ້ຢູ່ໃນການຄອບຄອງຂອງພວກເຂົາ. ໃນເວລານັ້ນ ພຣະເຈົ້າຍົກຜູ້ປະກາດພຣະທຳຫຼາຍຄົນຂຶ້ນເພື່ອກ່າວຄຳທຳນາຍ ແລະພວກເຂົາທຸກຄົນກໍເຮັດພາຍໃຕ້ການນຳພາຂອງພຣະເຢໂຮວາ. ນີ້ແມ່ນສ່ວນໜຶ່ງຂອງພາລະກິດຂອງພຣະເຈົ້າເທົ່ານັ້ນ. ໃນຂັ້ນຕອນທຳອິດ, ພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງ ແລະ ດ້ວຍເຫດນັ້ນພຣະອົງຈຶ່ງສັ່ງສອນທຸກຊົນເຜົ່າ ແລະ ທຸກຊາດຜ່ານຜູ້ປະກາດພຣະທຳ. ເມື່ອພຣະເຢຊູປະຕິບັດພາລະກິດໃນເວລາຂອງພຣະອົງ, ພຣະອົງບໍ່ໄດ້ກ່າວພຣະທຳຫຼາຍຄືກັບໃນຍຸກປັດຈຸບັນ. ຂັ້ນຕອນນີ້ພາລະກິດແຫ່ງພຣະທຳໃນຍຸກສຸດທ້າຍນີ້ແມ່ນບໍ່ເຄີຍຖືກປະຕິບັດມາກ່ອນໃນຍຸກຕ່າງໆ ແລະ ດ້ວຍ

ຜູ້ຄົນໃນອະດີດ. ເຖິງແມ່ນເອຊາຢາ, ດານີເອນ ແລະ ໂຢຮັນກ່າວຄຳທຳນາຍຫຼາຍຢ່າງ, ຄຳທຳນາຍຂອງພວກເຂົາແມ່ນແຕກຕ່າງຈາກພຣະທຳທີ່ກ່າວໃນປັດຈຸບັນຢ່າງສິ້ນເຊີງ. ສິ່ງທີ່ພວກເຂົາເວົ້າແມ່ນເປັນພຽງຄຳທຳນາຍ, ແຕ່ພຣະທຳທີ່ກ່າວໃນປັດຈຸບັນບໍ່ແມ່ນຄຳທຳນາຍ. ຖ້າເຮົາປ່ຽນທຸກສິ່ງທີ່ເຮົາກ່າວໃນປັດຈຸບັນໃຫ້ກາຍເປັນຄຳທຳນາຍ, ພວກເຈົ້າຈະສາມາດເຂົ້າໃຈໄດ້ບໍ? ສົມມຸດວ່າສິ່ງທີ່ເຮົາກ່າວເຖິງແມ່ນກ່ຽວກັບເລື່ອງທີ່ເກີດຂຶ້ນຫຼັງຈາກທີ່ເຮົາຈາກໄປແລ້ວ, ເຈົ້າຈະສາມາດເຂົ້າໃຈໄດ້ແນວໃດ? ພາລະກິດຂອງພຣະທຳບໍ່ເຄີຍຖືກປະຕິບັດໃນເວລາຂອງພຣະເຢຊູ ຫຼື ໃນຍຸກແຫ່ງພຣະບັນຍັດ. ບາງເທື່ອ ບາງຄົນຈະເວົ້າວ່າ "ພຣະເຢໂຮວາບໍ່ໄດ້ກ່າວພຣະທຳໃນເວລາພຣະອົງປະຕິບັດພາລະກິດຂອງພຣະອົງເຊັ່ນກັນບໍ? ນອກຈາກການຮັກສາຄົນເຈັບປ່ວຍ, ຂັບໄລ່ຜີຮ້າຍ ແລະ ສ້າງໝາຍສຳຄັນ ແລະ ສິ່ງອັດສະຈັນແລ້ວ, ພຣະເຢຊູບໍ່ໄດ້ກ່າວພຣະທຳໃນເວລາທີ່ພຣະອົງປະຕິບັດພາລະກິດຂອງພຣະອົງເຊັ່ນກັນບໍ?" ມີຄວາມແຕກຕ່າງກັນລະຫວ່າງສິ່ງຕ່າງໆທີ່ຖືກເວົ້າອອກມາ. ແມ່ນຫຍັງຄືແກ່ນແທ້ຂອງພຣະທຳທີ່ພຣະເຢໂຮວາກ່າວ? ພຣະອົງພຽງແຕ່ນຳພາມະນຸດໃຫ້ດຳລົງຊີວິດຂອງພວກເຂົາເທິງແຜ່ນດິນໂລກ ເຊິ່ງບໍ່ໄດ້ສຳຜັດເຖິງເລື່ອງຝ່າຍວິນຍານໃນຊີວິດເລີຍ. ເປັນຫຍັງຈຶ່ງເວົ້າວ່າ ເມື່ອພຣະເຢໂຮວາກ່າວ ພຣະອົງກ່າວເພື່ອສັ່ງສອນປະຊາຊົນຈາກທຸກຫົນແຫ່ງ? ພຣະທຳທີ່ວ່າ "ສັ່ງສອນ" ໝາຍເຖິງການບອກຢ່າງເປີດເຜີຍ ແລະ ການບັນຊາໂດຍກົງ. ພຣະອົງບໍ່ໄດ້ສະໜອງຊີວິດໃຫ້ກັບມະນຸດ; ກົງກັນຂ້າມ ພຣະອົງພຽງແຕ່ຈັບມືມະນຸດ ແລະ ສອນມະນຸດໃຫ້ເຄົາລົບນັບຖືພຣະອົງ ໂດຍບໍ່ມີການໃຊ້ຄຳອຸປະມາພໍສົມຄວນໃດ. ພາລະກິດທີ່ພຣະເຢໂຮວາປະຕິບັດໃນອິດສະຣາເອນບໍ່ແມ່ນເພື່ອຈັດການ ຫຼື ລົງວິໄນມະນຸດ ຫຼື ການພິພາກສາ ແລະ ການຂ້ຽນຕີ; ພາລະກິດຂອງພຣະອົງແມ່ນເພື່ອນຳພາມະນຸດ. ພຣະເຢໂຮວາສັ່ງໃຫ້ໂມເຊບອກກັບປະຊາຊົນຂອງພຣະອົງໃຫ້ຊອກຫາອາຫານມານາໃນຖິ່ນແຫ້ງແລ້ງກັນດານ. ທຸກເຊົ້າກ່ອນຕາເວັນຂຶ້ນ ພວກເຂົາຕ້ອງຊອກຫາເກັບມານາໃຫ້ພໍກິນສຳລັບພວກເຂົາໃນມື້ນັ້ນ. ມານາບໍ່ສາມາດຖືກເກັບໄວ້ຈົນຮອດມື້ຕໍ່ໄປໄດ້ ເພາະມັນຈະຂຶ້ນລາ. ພຣະອົງບໍ່ໄດ້ສັ່ງສອນມະນຸດ ຫຼື ເປີດໂປງທຳມະຊາດຂອງພວກເຂົາ ຫຼື ພຣະອົງບໍ່ໄດ້ເປີດເຜີຍແນວຄິດ ແລະ ຄວາມຄິດຂອງພວກເຂົາ. ພຣະອົງບໍ່ໄດ້ປ່ຽນແປງມະນຸດ ແຕ່ກົງກັນຂ້າມພຣະອົງນຳພາມະນຸດໃນການດຳລົງຊີວິດຂອງພວກເຂົາ. ມະນຸດໃນເວລານັ້ນເປັນຄືກັບເດັກນ້ອຍ, ບໍ່ເຂົ້າໃຈຫຍັງເລີຍ ແລະ ພຽງແຕ່ມີຄວາມສາມາດໃນການເຄື່ອນໄຫວໄປມາຄ້າຍຄືຈັກກົນ; ດ້ວຍເຫດນັ້ນ ພຣະເຢໂຮວາຈຶ່ງພຽງແຕ່ບັນຍັດຂໍ້ກົດໝາຍເພື່ອນຳພາປວງຊົນ.

ເພື່ອເຜີຍແຜ່ຂ່າວປະເສີດ, ເພື່ອໃຫ້ທຸກຄົນທີ່ສະແຫວງຫາດ້ວຍຫົວໃຈທີ່ແທ້ຈິງໄດ້ຮັບຄວາມຮູ້ກ່ຽວກັບພາລະກິດທີ່ເຮັດໃນມື້ນີ້ ແລະ ເຊື່ອໝັ້ນຢ່າງທົ່ວເຖິງ, ເຈົ້າຕ້ອງມີຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບເລື່ອງລາວພາຍໃນ, ແກ່ນແທ້ ແລະ ຄວາມໝາຍຂອງພາລະກິດທີ່ໄດ້ປະຕິບັດໃນແຕ່ລະຂັ້ນຕອນ. ການເຮັດແບບນັ້ນກໍເພື່ອວ່າ ໃນເວລາຟັງການສົນທະນາຂອງເຈົ້າ ຄົນອື່ນອາດເຂົ້າໃຈພາລະກິດຂອງພຣະເຢໂຮວາ, ພາລະກິດຂອງພຣະເຢຊູ ແລະ ແມ່ນແຕ່ພາລະກິດທັງໝົດຂອງພຣະເຈົ້າໃນປັດຈຸບັນພ້ອມກັບການເຊື່ອມໂຍງ ແລະ ເຂົ້າໃຈຄວາມແຕກຕ່າງລະຫວ່າງສາມຂັ້ນຕອນຂອງພາລະກິດ. ການ

ເຮັດແບບນັ້ນກໍເພື່ອວ່າ ຫຼັງຈາກທີ່ພວກເຂົາໄດ້ຟັງຈົບແລ້ວ ຄົນອື່ນຈະເຫັນວ່າທັງສາມຂັ້ນຕອນບໍ່ໄດ້ຂັດຂວາງກັນ ແຕ່ທັງໝົດແມ່ນພາລະກິດຂອງພຣະວິນຍານອົງດຽວ. ເຖິງແມ່ນພຣະອົງທັງສາມປະຕິບັດພາລະກິດໃນຍຸກທີ່ຕ່າງກັນ, ເນື້ອຫາຂອງພາລະກິດທີ່ພຣະອົງທັງສາມປະຕິບັດກໍແຕກຕ່າງກັນ ແລະ ພຣະທຳທີ່ພຣະອົງທັງສາມກ່າວກໍຍັງແຕກຕ່າງກັນ, ແຕ່ຫຼັກການທີ່ພຣະອົງທັງສາມປະຕິບັດພາລະກິດແມ່ນອັນໜຶ່ງອັນດຽວກັນ. ສິ່ງເຫຼົ່ານີ້ແມ່ນນິມິດທີ່ຍິ່ງໃຫຍ່ທີ່ສຸດທີ່ທຸກຄົນທີ່ຕິດຕາມພຣະເຈົ້າຄວນເຂົ້າໃຈ.

# ການບັງເກີດເປັນມະນຸດທັງສອງຄັ້ງໄດ້ເຮັດໃຫ້ຄວາມສຳຄັນຂອງການບັງເກີດເປັນມະນຸດສຳເລັດ

ແຕ່ລະຂັ້ນຕອນຂອງພາລະກິດທີ່ປະຕິບັດໂດຍພຣະເຈົ້າແມ່ນມີຄວາມສຳຄັນຕົວຈິງຂອງມັນເອງ. ໃນເວລານັ້ນ ເມື່ອພຣະເຢຊູມາ ພຣະອົງມາໃນຮູບຮ່າງຜູ້ຊາຍ ແລະ ເມື່ອພຣະເຈົ້າມາໃນຄັ້ງນີ້ ຮູບຮ່າງຂອງພຣະອົງເປັນແມ່ຍິງ. ຈາກສິ່ງນີ້ ເຈົ້າສາມາດເຫັນໄດ້ວ່າ ການເນລະມິດສ້າງທັງຜູ້ຊາຍ ແລະ ແມ່ຍິງຂອງພຣະເຈົ້າສາມາດເປັນປະໂຫຍດໃນພາລະກິດຂອງພຣະອົງ ແລະ ສຳລັບພຣະອົງແລ້ວ ບໍ່ມີຄວາມແບ່ງແຍກທາງດ້ານເພດ. ເມື່ອພຣະວິນຍານຂອງພຣະອົງມາ ພຣະອົງສາມາດສະຖິດເຂົ້າໃນເນື້ອໜັງໃດກໍໄດ້ທີ່ພຣະອົງພໍໃຈ ແລະ ເນື້ອໜັງນັ້ນສາມາດເປັນຕົວແທນຂອງພຣະອົງໄດ້; ບໍ່ວ່າຈະເປັນເພດຊາຍ ຫຼື ຍິງ, ມັນສາມາດເປັນຕົວແທນໃຫ້ແກ່ພຣະເຈົ້າໄດ້ ຕາບໃດທີ່ມັນຄືເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງ. ຖ້າພຣະເຢຊູປາກົດເປັນເພດຍິງໃນເວລາພຣະອົງມາ, ເວົ້າອີກຢ່າງໜຶ່ງກໍຄື ຖ້າພຣະວິນຍານບໍລິສຸດບັງເກີດເປັນເດັກຍິງເຍົາໄວ ແລະ ບໍ່ແມ່ນເດັກຊາຍ ຂັ້ນຕອນພາລະກິດກໍຈະຖືກເຮັດໃຫ້ສຳເລັດທັງໝົດເຊັ່ນດຽວກັນ. ຖ້າເປັນເຊັ່ນນັ້ນ, ຂັ້ນຕອນພາລະກິດໃນປັດຈຸບັນກໍຈະຕ້ອງເຮັດໂດຍເພດຊາຍແທນ ແຕ່ພາລະກິດດັ່ງກ່າວກໍຈະຖືກເຮັດໃຫ້ສຳເລັດທັງໝົດຄືເກົ່າ. ພາລະກິດທີ່ສຳເລັດໃນແຕ່ລະຂັ້ນຕອນມີຄວາມສຳຄັນຂອງມັນ; ບໍ່ມີຂັ້ນຕອນໃດຂອງພາລະກິດທີ່ຖືກເຮັດຊໍ້າກັນ ຫຼື ມັນບໍ່ຂັດແຍ້ງກັນເອງ. ໃນເວລານັ້ນ ເມື່ອກຳລັງປະຕິບັດພາລະກິດຂອງພຣະອົງ ພຣະເຢຊູໄດ້ຖືກເອີ້ນວ່າ ພຣະບຸດອົງດຽວ ແລະ "ພຣະບຸດ" ໝາຍເຖິງເພດຊາຍ. ແຕ່ເຫດໃດພຣະບຸດອົງດຽວຈຶ່ງບໍ່ໄດ້ກ່າວເຖິງໃນຍຸກນີ້? ນີ້ກໍຍ້ອນວ່າ ຄວາມຮຽກຮ້ອງຕ້ອງການຂອງພາລະກິດໄດ້ເຮັດໃຫ້ມີການປ່ຽນແປງເພດທີ່ແຕກຕ່າງຈາກພຣະເຢຊູ. ສຳລັບພຣະເຈົ້າແລ້ວ ບໍ່ມີຄວາມແຕກຕ່າງດ້ານທາງເພດ. ພຣະອົງກະທຳພາລະກິດຂອງພຣະອົງຕາມທີ່ພຣະອົງປາຖະໜາຈະເຮັດ ແລະ ໃນການປະຕິບັດພາລະກິດຂອງພຣະອົງ, ພຣະອົງບໍ່ໄດ້ຢູ່ພາຍໃຕ້ຂໍ້ຈຳກັດໃດໆ, ແຕ່ເປັນການປະຕິບັດຢ່າງເສລີເປັນພິເສດ. ເຖິງຢ່າງໃດກໍຕາມ, ທຸກຂັ້ນຕອນຂອງພາລະກິດແມ່ນມີຄວາມສຳຄັນທີ່ແທ້ຈິງຂອງມັນເອງ. ພຣະເຈົ້າໄດ້ກາຍເປັນເນື້ອໜັງສອງຄັ້ງ ແລະ ມັນຈະເຫັນໄດ້ຢ່າງຈະແຈ້ງເລີຍວ່າ ການບັງເກີດເປັນມະນຸດຂອງພຣະອົງໃນຍຸກສຸດທ້າຍນີ້ແມ່ນເປັນຄັ້ງສຸດທ້າຍ. ພຣະອົງມາເພື່ອເປີດເຜີຍການກະທຳທັງໝົດຂອງພຣະອົງ. ຖ້າໃນຂັ້ນຕອນນີ້ທີ່ພຣະອົງບໍ່ໄດ້ກາຍເປັນເນື້ອໜັງເພື່ອກະທຳພາລະກິດໂດຍພຣະອົງເອງເພື່ອໃຫ້ມະນຸດໄດ້ປະຈັກ ມະນຸດຈະຍຶດໝັ້ນໃນຄວາມຄິດຕະຫຼອດໄປວ່າ ພຣະເຈົ້າເປັນເພດຊາຍເທົ່ານັ້ນ, ບໍ່ແມ່ນເພດຍິງ. ກ່ອນໜ້ານີ້, ມວນມະນຸດຊາດເຊື່ອວ່າ ພຣະເຈົ້າສາມາດເປັນເພດຊາຍເທົ່ານັ້ນ ແລະ ເພດຍິງບໍ່ສາມາດເອີ້ນເປັນພຣະເຈົ້າໄດ້ ຍ້ອນວ່າມະນຸດຊາດທັງປວງຖືວ່າ ຜູ້ຊາຍມີສິດອຳນາດເໜືອຜູ້ຍິງ. ພວກເຂົາເຊື່ອວ່າ ບໍ່ມີຜູ້ຍິງຄົນໃດສາມາດປົກຄອງໄດ້, ມີແຕ່ຜູ້ຊາຍເທົ່ານັ້ນ. ຍິ່ງໄປກວ່ານັ້ນ, ພວກເຂົາຍັງເວົ້າວ່າ ຜູ້ຊາຍເປັນຫົວໜ້າຜູ້ຍິງ ເຊິ່ງຜູ້ຍິງຕ້ອງເຊື່ອຟັງຜູ້ຊາຍ ແລະ ບໍ່ສາມາດຢູ່ເໜືອຜູ້ຊາຍໄດ້. ໃນອະດີດ, ການເວົ້າວ່າ ຜູ້ຊາຍຄືຫົວໜ້າຜູ້ຍິງນັ້ນແມ່ນໝາຍເຖິງອາດາມກັບເອວາ ຜູ້ທີ່ຖືກງູລໍ້ລວງ, ບໍ່ໄດ້ໝາຍເຖິງຜູ້ຊາຍ

ແລະ ຜູ້ຍິງທີ່ຖືກສ້າງໂດຍພຣະເຢໂຮວາໃນເບື້ອງຕົ້ນ. ແນ່ນອນຢູ່ແລ້ວ ຜູ້ຍິງກໍຕ້ອງເຊື່ອຟັງ ແລະ ຮັກຜົວຂອງນາງ ແລະ ຜູ້ເປັນຜົວກໍຕ້ອງຮຽນຮູ້ທີ່ຈະລ້ຽງດູ ແລະ ສະໜັບສະໜູນຄອບຄົວຂອງຕົນ. ນີ້ແມ່ນກົດເກນ ແລະ ກົດບັນຍັດທີ່ວາງອອກໂດຍພຣະເຢໂຮວາ ເຊິ່ງມະນຸດຊາດຕ້ອງປະຕິບັດຕາມໃນການໃຊ້ຊີວິດຂອງພວກເຂົາຢູ່ເທິງແຜ່ນດິນໂລກນີ້. ພຣະເຢໂຮວາໄດ້ກ່າວຕໍ່ຜູ້ຍິງວ່າ "ຄວາມປາຖະໜາຂອງເຈົ້າຈະຕ້ອງເປັນຜົວຂອງເຈົ້າ ແລະ ລາວຈະປົກຄອງເຈົ້າເອງ". ພຣະອົງກ່າວດັ່ງນັ້ນກໍເພື່ອວ່າມະນຸດ (ນັ້ນກໍຄື ທັງຜູ້ຊາຍ ແລະ ຜູ້ຍິງ) ຈະໄດ້ໃຊ້ຊີວິດເປັນປົກກະຕິຢູ່ພາຍໃຕ້ອຳນາດຂອງພຣະເຢໂຮວາ ແລະ ເພື່ອວ່າຊີວິດຂອງມະນຸດຈະໄດ້ມີໂຄງສ້າງ ແລະ ບໍ່ອອກຈາກຄວາມເປັນລະບົບລະບຽບທີ່ປົກກະຕິ. ດັ່ງນັ້ນ ພຣະເຢໂຮວາ ຈຶ່ງສ້າງກົດເກນທີ່ເໝາະສົມສຳລັບຜູ້ຊາຍ ແລະ ຜູ້ຍິງຄວນປະຕິບັດຕົນແບບໃດ, ແຕ່ວ່າກົດເກນເຫຼົ່ານີ້ແມ່ນກຳນົດໃຊ້ສະເພາະກັບທຸກສິ່ງທີ່ຖືກສ້າງຂຶ້ນເທິງແຜ່ນດິນໂລກ ແລະ ບໍ່ມີຄວາມກ່ຽວຂ້ອງຫຍັງກັບພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດ. ພຣະເຈົ້າຈະເປັນເໝືອນການສ້າງຂອງພຣະອົງໄດ້ແນວໃດ? ພຣະທຳຂອງພຣະອົງແມ່ນແນໃສ່ມະນຸດຊາດທີ່ພຣະອົງສ້າງຂຶ້ນເທົ່ານັ້ນ ມັນແມ່ນເພື່ອໃຫ້ ມະນຸດຊາດໄດ້ດຳລົງຊີວິດຢູ່ແບບປົກກະຕິທີ່ພຣະອົງສ້າງຂຶ້ນສຳລັບຜູ້ຊາຍ ແລະ ຜູ້ຍິງ. ໃນຕົ້ນເດີມນັ້ນ ເມື່ອພຣະເຢໂຮວາເນລະມິດສ້າງມະນຸດຊາດ ພຣະອົງສ້າງມະນຸດສອງປະເພດ, ທັງເພດຊາຍ ແລະ ຍິງ. ສະນັ້ນ ຈຶ່ງມີການແບ່ງແຍກລະຫວ່າງເພດຊາຍ ແລະ ຍິງໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງ. ພຣະອົງບໍ່ໄດ້ຕັດສິນໃຈພາລະກິດຂອງພຣະອົງໂດຍອີງຕາມພຣະທຳທີ່ພຣະອົງໄດ້ກ່າວຕໍ່ອາດາມ ແລະ ເອວາ. ໃນສອງຄັ້ງທີ່ພຣະອົງກາຍເປັນເນື້ອໜັງນັ້ນ ແມ່ນໄດ້ກຳນົດທັງໝົດອີງຕາມຄວາມຄິດຂອງພຣະອົງໃນເວລາທີ່ພຣະອົງສ້າງມະນຸດໃນຄັ້ງທຳອິດ, ນັ້ນກໍຄືພຣະອົງສຳເລັດພາລະກິດຂອງການບັງເກີດເປັນມະນຸດສອງຄັ້ງຂອງພຣະອົງອີງຕາມເພດຊາຍ ແລະເພດຍິງກ່ອນທີ່ພວກເຂົາໄດ້ຖືກເສື່ອມໂຊມອີກ. ຖ້າມະນຸດຊາດຮັບເອົາພຣະທຳທີ່ກ່າວໂດຍພຣະເຢໂຮວາຕໍ່ອາດາມ ແລະ ເອວາຜູ້ທີ່ຖືກງູລໍ້ລວງ ແລະ ໃຊ້ພຣະທຳດັ່ງກ່າວນັ້ນເຂົ້າໃນພາລະກິດແຫ່ງການບັງເກີດເປັນມະນຸດຂອງພຣະເຈົ້າ, ແລ້ວພຣະເຢຊູຈະບໍ່ໄດ້ຮັກພັນລະຍາຂອງພຣະອົງ ຕາມທີ່ພຣະອົງຄວນເຮັດບໍ? ດ້ວຍວິທີນີ້ ພຣະເຈົ້າກໍຍັງຈະເປັນພຣະເຈົ້າຢູ່ບໍ? ຖ້າເປັນດັ່ງນັ້ນ ພຣະອົງກໍຍັງຈະສາມາດສຳເລັດພາລະກິດຂອງພຣະອົງໄດ້ຢູ່ບໍ? ຖ້າວ່າ ມັນຜິດສຳລັບເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າທີ່ຈະເປັນເພດຍິງ, ແລ້ວມັນຈະບໍ່ເປັນການຜິດພາດຢ່າງໃຫຍ່ຫຼວງເຊັ່ນດຽວກັນບໍ ທີ່ພຣະເຈົ້າໄດ້ສ້າງຜູ້ຍິງຂຶ້ນມາ? ຖ້າຜູ້ຄົນຍັງເຊື່ອວ່າ ມັນຜິດສຳລັບພຣະເຈົ້າຈະບັງເກີດເປັນຜູ້ຍິງ, ແລ້ວພຣະເຢຊູ ຈະບໍ່ຜິດເຊັ່ນດຽວກັນກັບການບັງເກີດເປັນມະນຸດໃນປັດຈຸບັນບໍ ທີ່ພຣະອົງບໍ່ໄດ້ແຕ່ງດອງ ແລະ ດັ່ງນັ້ນບໍ່ສາມາດຮັກພັນລະຍາຂອງພຣະອົງໄດ້? ໃນເມື່ອເຈົ້າເອົາຂໍ້ພຣະທຳທີ່ກ່າວຕໍ່ເອວາມາວັດແທກຄວາມຈິງກ່ຽວກັບການບັງເກີດເປັນມະນຸດຂອງພຣະເຈົ້າໃນປັດຈຸບັນ, ເຈົ້າກໍຕ້ອງໃຊ້ຂໍ້ພຣະທຳທີ່ພຣະເຢໂຮວາກ່າວຕໍ່ອາດາມນັ້ນມາຕັດສິນພຣະເຢຊູເຈົ້າ ຜູ້ກາຍເປັນເນື້ອໜັງໃນຍຸກແຫ່ງພຣະຄຸນ. ສິ່ງເຫຼົ່ານີ້ບໍ່ແມ່ນອັນໜຶ່ງອັນດຽວກັນແມ່ນບໍ? ໃນເມື່ອເຈົ້າຮັບເອົາການວັດແທກຂອງພຣະເຢຊູເຈົ້າອີງຕາມເພດຊາຍທີ່ບໍ່ໄດ້ຖືກລໍ້ລວງດ້ວຍງູ, ແລ້ວເຈົ້າກໍບໍ່ຕ້ອງຕັດສິນຄວາມຈິງກ່ຽວກັບການບັງເກີດເປັນມະນຸດໃນ

ປັດຈຸບັນ ໂດຍອີງຕາມເພດຍິງຜູ້ທີ່ຖືກລໍ້ລວງດ້ວຍງູ. ສິ່ງນີ້ບໍ່ຍຸຕິທຳເລີຍ! ຖ້າເຈົ້າຕັດສິນພຣະເຈົ້າແບບນີ້ໄດ້ພິສູດໃຫ້ເຫັນວ່າເຈົ້າຂາດເຫດຜົນ. ເມື່ອພຣະເຢໂຮວາກາຍເປັນເນື້ອໜັງສອງຄັ້ງ, ເພດຂອງເນື້ອໜັງພຣະອົງກໍກ່ຽວຂ້ອງກັບຊາຍ ແລະ ຍິງຜູ້ທີ່ບໍ່ໄດ້ຖືກລໍ້ລວງດ້ວຍງູ; ມັນກໍສອດຄ່ອງກັບຊາຍ ແລະ ຍິງທີ່ບໍ່ໄດ້ຖືກລໍ້ລວງດ້ວຍງູ, ພຣະອົງຈຶ່ງກາຍເປັນເນື້ອໜັງມະນຸດສອງຄັ້ງ. ບໍ່ຕ້ອງຄິດວ່າຄວາມເປັນຜູ້ຊາຍຂອງພຣະເຢຊູແມ່ນຄືກັນກັບອາດາມຜູ້ທີ່ຖືກລໍ້ລວງດ້ວຍງູ. ທັງສອງແມ່ນບໍ່ກ່ຽວຂ້ອງກັນ ແລະ ທັງສອງເປັນຜູ້ຊາຍທີ່ມີທຳມະຊາດແຕກຕ່າງກັນຢ່າງສິ້ນເຊີງ. ແນ່ນອນ ຄວາມເປັນຜູ້ຊາຍຂອງພຣະເຢຊູຈະບໍ່ສາມາດພິສູດວ່າພຣະອົງເທົ່ານັ້ນຄືຫົວໜ້າຜູ້ຍິງທັງໝົດ ແຕ່ບໍ່ແມ່ນຫົວໜ້າຜູ້ຊາຍທັງໝົດ? ພຣະອົງບໍ່ແມ່ນກະສັດຂອງຊາວຢິວທັງໝົດບໍ (ລວມທັງຜູ້ຊາຍ ແລະ ຍິງ)? ພຣະອົງເອງຄືພຣະເຈົ້າ. ພຣະອົງບໍ່ແມ່ນຫົວໜ້າຜູ້ຍິງ ແຕ່ເປັນຫົວໜ້າຜູ້ຊາຍອີກດ້ວຍ. ພຣະອົງຄືພຣະຜູ້ເປັນເຈົ້າຂອງທຸກສິ່ງທີ່ມີຊີວິດ ແລະ ເປັນຫົວໜ້າຂອງສິ່ງທີ່ມີຊີວິດທັງປວງ. ເຈົ້າຈະກຳນົດຄວາມເປັນຜູ້ຊາຍຂອງພຣະເຢຊູວ່າເປັນສັນຍາລັກໃນການເປັນຫົວໜ້າຂອງຜູ້ຍິງໄດ້ແນວໃດ? ນີ້ບໍ່ແມ່ນເປັນການໝິ່ນປະໝາດພຣະອົງບໍ? ພຣະເຢຊູເປັນເພດຊາຍທີ່ບໍ່ໄດ້ຖືກເສື່ອມໂຊມ. ພຣະອົງຄືພຣະເຈົ້າ, ພຣະອົງຄືພຣະຄຣິດ, ພຣະອົງຄືພຣະຜູ້ເປັນເຈົ້າ. ແລ້ວຈະໃຫ້ພຣະອົງເປັນຜູ້ຊາຍທີ່ຄືອາດາມ ຜູ້ທີ່ຖືກເສື່ອມໂຊມໄດ້ແນວໃດ? ພຣະເຢຊູຄືເນື້ອໜັງທີ່ສະຖິດໂດຍພຣະວິນຍານອັນບໍລິສຸດທີ່ສຸດຂອງພຣະເຈົ້າ. ແລ້ວເຈົ້າຈະຫາວ່າພຣະອົງມີຄວາມເປັນຜູ້ຊາຍຄືອາດາມໄດ້ແນວໃດ? ຖ້າເປັນດັ່ງນັ້ນ, ພາລະກິດຂອງພຣະເຈົ້າທັງໝົດຈະບໍ່ຜິດບໍ? ພຣະເຢໂຮວາໄດ້ລວມຢູ່ໃນພຣະເຢຊູ ເຊິ່ງເປັນລັກສະນະຜູ້ຊາຍຂອງອາດາມທີ່ຖືກລໍ້ລວງໂດຍງູຜິດ? ການບັງເກີດເປັນມະນຸດໃນປັດຈຸບັນນີ້ບໍ່ແມ່ນພາລະກິດອີກສ່ວນໜຶ່ງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ ຜູ້ທີ່ມີເພດແຕກຕ່າງຈາກພຣະເຢຊູ ແຕ່ມີທຳມະຊາດຄ້າຍຄືພຣະອົງບໍ? ເຈົ້າຍັງຈະກ້າເວົ້າວ່າພຣະເຈົ້າຜູ້ບັງເກີດເປັນມະນຸດບໍ່ສາມາດເປັນຜູ້ຍິງໄດ້ ຍ້ອນວ່າຜູ້ຍິງຄືຜູ້ທຳອິດທີ່ຖືກລໍ້ລວງດ້ວຍງູຢູ່ບໍ? ເຈົ້າຍັງຈະກ້າເວົ້າຢູ່ບໍ່ວ່າ ຍ້ອນຜູ້ຍິງເປັນເພດທີ່ບໍ່ສະອາດທີ່ສຸດ ແລະ ເປັນແຫຼ່ງກຳເນີດຂອງການເສື່ອມຊາມຂອງມະນຸດ ສະນັ້ນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະກາຍມາເປັນເນື້ອໜັງດັ່ງຜູ້ຍິງ? ເຈົ້າກ້າຍຶດໝັ້ນໃນຄຳເວົ້າບໍວ່າ "ຜູ້ຍິງຈະຕ້ອງເຊື່ອຟັງຜູ້ຊາຍສະເໝີ ແລະ ບໍ່ສາມາດປາກົດຕົວ ຫຼື ເປັນຕົວແທນພຣະເຈົ້າໄດ້ໂດຍກົງ"? ເຈົ້າບໍ່ເຂົ້າໃຈໃນສິ່ງທີ່ຜ່ານມາ ແຕ່ເຈົ້າພັດດູໝິ່ນພາລະກິດຂອງພຣະເຈົ້າ ໂດຍສະເພາະໃນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງ? ຖ້າເຈົ້າຍັງບໍ່ສາມາດເຫັນສິ່ງນີ້ຢ່າງຈະແຈ້ງ, ທາງທີ່ດີໃຫ້ເຈົ້າລະວັງລີ້ນຂອງເຈົ້າໃຫ້ດີ ເພາະຢ້ານວ່າຄວາມໂງ່ຈ້າ ແລະ ຄວາມບໍ່ຮູ້ຂອງເຈົ້າຈະຖືກເປີດເຜີຍ ແລະ ຄວາມໜ້າກຽດຊັງຂອງເຂົາຈະຖືກເປີດໂປງ. ຢ່າຄິດວ່າເຈົ້າເຂົ້າໃຈທຸກສິ່ງ. ເຮົາຂໍບອກເຈົ້າວ່າ ທັງໝົດທີ່ເຈົ້າໄດ້ເຫັນ ແລະ ຜະເຊີນ ແມ່ນບໍ່ພຽງພໍສຳລັບເຈົ້າທີ່ຈະເຂົ້າໃຈແມ່ນແຕ່ໜຶ່ງສ່ວນພັນຂອງແຜນການຄຸ້ມຄອງຂອງເຮົາ. ສະນັ້ນ ເຫດໃດເຈົ້າຈຶ່ງປະພຶດຢ່າງທະນົງຕົວແບບນີ້? ພອນສະຫວັນອັນເລັກນ້ອຍ ແລະ ຄວາມຮູ້ອັນເລັກນ້ອຍຂອງເຈົ້າບໍ່ພຽງພໍສຳລັບພຣະເຢຊູທີ່ຈະນຳໃຊ້ເຂົ້າໃນພາລະກິດຂອງພຣະອົງແມ່ນແຕ່ວິນາທີດຽວ. ແທ້ຈິງແລ້ວ ເຈົ້າມີປະສົບການຫຼາຍປານໃດ? ສິ່ງທີ່ເຈົ້າເຫັນ ແລະ ສິ່ງທັງໝົດທີ່ເຈົ້າໄດ້ຍິນຕະຫຼອດຊີວິດຂອງເຈົ້າ ແລະ ສິ່ງທີ່ເຈົ້າໄດ້

ຈິນຕະນາການໄວ້ ແມ່ນນ້ອຍກວ່າພາລະກິດທີ່ເຮົາເຮັດໃນຊ່ວງເວລາດຽວອີກ! ທາງທີ່ດີ ເຈົ້າບໍ່ຄວນຫາເລື່ອງ ແລະ ຈັບຜິດ. ເຈົ້າສາມາດອວດດີສໍ່າທີ່ເຈົ້າຕ້ອງການ, ແຕ່ເຈົ້າກໍເປັນພຽງສິ່ງທີ່ມີຊີວິດເຊິ່ງບໍ່ແມ່ນແຕ່ທຽບເທົ່າກັບໂຕມົດ! ທັງໝົດທີ່ເຈົ້າມີຢູ່ໃນທ້ອງຂອງເຈົ້າແມ່ນນ້ອຍກວ່າສິ່ງທີ່ໂຕມົດມີຢູ່ໃນຕົວມັນອີກ! ຢ່າຄິດວ່າ ຍ້ອນເຈົ້າໄດ້ຮັບປະສົບການບາງຢ່າງ ແລະ ໄດ້ເປັນຜູ້ອາວຸໂສ ສະນັ້ນເຈົ້າຈຶ່ງມີສິດຊີ້ຕີນຊີ້ມື ແລະ ເວົ້າໃຫຍ່ໄດ້ຢ່າງຕາມໃຈ. ປະສົບການຂອງເຈົ້າ ແລະ ຄວາມອາວຸໂສຂອງເຈົ້າບໍ່ແມ່ນຜົນຮັບມາຈາກພຣະທຳທີ່ເຮົາກ່າວບໍ? ເຈົ້າເຊື່ອວ່າເຈົ້າຊື້ພຣະທຳເຫຼົ່ານັ້ນດ້ວຍເຫື່ອແຮງ ແລະ ເລືອດເນື້ອຂອງເຈົ້າເອງບໍ? ປັດຈຸບັນນີ້ ເຈົ້າເຫັນວ່າ ເຮົາໄດ້ກາຍເປັນເນື້ອໜັງ ແລະ ພຽງສິ່ງນີ້ສິ່ງດຽວເຈົ້າກໍເຕັມໄປດ້ວຍແນວຄວາມຄິດຕ່າງໆນາໆ ແລະ ໄດ້ຮັບແນວຄິດຢ່າງຫຼວງຫຼາຍຈາກພວກມັນ. ຖ້າບໍ່ແມ່ນຍ້ອນການບັງເກີດເປັນມະນຸດຂອງເຮົາ, ເຖິງແມ່ນວ່າເຈົ້າຈະມີພອນສະຫວັນພິເສດ ເຈົ້າກໍຈະບໍ່ມີແນວຄວາມຄິດຫຼາຍປານນັ້ນ ແລະ ບໍ່ແມ່ນຍ້ອນສິ່ງເຫຼົ່ານີ້ບໍ ທີ່ກໍ່ໃຫ້ເກີດມີແນວຄິດຕ່າງໆຂອງເຈົ້າ? ຖ້າພຣະເຢຊູບໍ່ໄດ້ກາຍເປັນເນື້ອໜັງໃນຄັ້ງທຳອິດນັ້ນ ເຈົ້າຈະເຖິງກັບຮູ້ກ່ຽວກັບການບັງເກີດເປັນມະນຸດຢູ່ບໍ? ບໍ່ແມ່ນເປັນຍ້ອນການບັງເກີດເປັນມະນຸດຄັ້ງທຳອິດບໍ ທີ່ເຮັດໃຫ້ເຈົ້າມີຄວາມຮູ້ເຊິ່ງເຈົ້າອວດດີທີ່ຈະພະຍາຍາມຕັດສິນການບັງເກີດເປັນມະນຸດຄັ້ງທີສອງຂອງພຣະອົງ? ເປັນຫຍັງແທນທີ່ຈະເປັນຜູ້ຕິດຕາມດ້ວຍຢ່າງເຊື່ອຟັງ ເຈົ້າຈຶ່ງຕ້ອງຄົ້ນຄວ້າສຶກສາມັນ? ເມື່ອເຈົ້າໄດ້ເຂົ້າສູ່ກະແສນີ້ ແລະ ມາຢູ່ຕໍ່ໜ້າພຣະເຈົ້າຜູ້ບັງເກີດເປັນມະນຸດ ພຣະອົງຈະປ່ອຍໃຫ້ເຈົ້າໄດ້ຄົ້ນຄວ້າກ່ຽວກັບພຣະອົງຢູ່ບໍ? ເຈົ້າສາມາດສຶກສາປະຫວັດຄອບຄົວຂອງເຈົ້າ, ແຕ່ວ່າ ຖ້າເຈົ້າພະຍາຍາມສຶກສາ "ປະຫວັດຄອບຄົວ" ຂອງພຣະເຈົ້າ, ພຣະເຈົ້າໃນປັດຈຸບັນຈະປ່ອຍໃຫ້ເຈົ້າດຳເນີນການສຶກສາດັ່ງກ່າວຢູ່ບໍ? ເຈົ້າບໍ່ແມ່ນຕາບອດບໍ? ເຈົ້າບໍ່ແມ່ນນຳເອົາຄວາມດູຖູກມາສູ່ຕົນເອງບໍ?

ຖ້າພາລະກິດຂອງພຣະເຢຊູພຽງແຕ່ສຳເລັດ ແລະ ບໍ່ໄດ້ຖືກເສີມຂະຫຍາຍດ້ວຍພາລະກິດໃນຂັ້ນຕອນນີ້ຂອງຍຸກສຸດທ້າຍ, ມະນຸດກໍຈະຍຶດໝັ້ນໃນແນວຄິດຕະຫຼອດໄປວ່າ ມີພຽງພຣະເຢຊູເທົ່ານັ້ນຄືພຣະບຸດຂອງພຣະເຈົ້າ, ໝາຍຄວາມວ່າ ພຣະເຈົ້າມີພຽງບຸດຊາຍອົງດຽວ ແລະ ທຸກຄົນທີ່ມາຕາມຫຼັງໂດຍໃຊ້ຊື່ອື່ນຈະບໍ່ແມ່ນພຣະບຸດອົງດຽວຂອງພຣະເຈົ້າ, ແລ້ວແຮງໄກທີ່ຈະເປັນພຣະເຈົ້າເອງໄດ້. ມະນຸດມີແນວຄິດວ່າ ທຸກຄົນທີ່ຮັບໃຊ້ເປັນເຄື່ອງບູຊາບາບ ຫຼື ຜູ້ທີ່ມີອຳນາດຕາງໜ້າພຣະເຈົ້າ ແລະ ໄຖ່ບາບໃຫ້ມວນມະນຸດຊາດແມ່ນພຣະບຸດອົງດຽວຂອງພຣະເຈົ້າ. ມີບາງຄົນເຊື່ອວ່າ ຕາບໃດທີ່ເປັນຜູ້ທີ່ນັ້ນເປັນເພດຊາຍ ພຣະອົງນັ້ນອາດຖືວ່າເປັນພຣະບຸດອົງດຽວຂອງພຣະເຈົ້າ ແລະ ເປັນຕົວແທນຂອງພຣະເຈົ້າ. ຍັງມີຜູ້ຄົນອີກຈຳນວນໜຶ່ງທີ່ເວົ້າວ່າ ພຣະເຢຊູເປັນພຣະບຸດຂອງພຣະເຢໂຮວາ, ເປັນພຣະບຸດອົງດຽວຂອງພຣະອົງ. ແນວຄິດດັ່ງກ່າວບໍ່ໂອ້ອວດເກີນໄປບໍ? ຄວາມເຊື່ອນອກເໜືອຄວາມເປັນຈິງຢ່າງຮ້າຍແຮງບໍ? ຖ້າຂັ້ນຕອນນີ້ຂອງພາລະກິດບໍ່ໄດ້ປະຕິບັດໃນຍຸກສຸດທ້າຍ ແລ້ວມະນຸດທຸກຄົນກໍຈະມືດມົວຢູ່ພາຍໃຕ້ເງົາມືດກ່ຽວກັບເລື່ອງຂອງພຣະເຈົ້າ. ຖ້າຫາກວ່າເປັນເຊັ່ນນີ້, ຜູ້ຊາຍຈະຄິດວ່າຕົນເອງສູງສົ່ງກວ່າຜູ້ຍິງ ແລະ ຜູ້ຍິງກໍຈະບໍ່ສາມາດເງີຍຫົວຂຶ້ນໄດ້ ແລະ ດ້ວຍເຫດນັ້ນ ກໍຈະບໍ່ມີຜູ້ຍິງຄົນໃດຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ຜູ້ຄົນເຊື່ອວ່າພຣະເຈົ້າເປັນຜູ້ຊາຍສະເໝີ ແລະ ຍິ່ງໄປກວ່າ

ນັ້ນ ພຣະອົງລັງກຽດຜູ້ຍິງ ແລະ ຈະບໍ່ປະທານຄວາມລອດພົ້ນໃຫ້ເຂົາ. ຖ້າຫາກວ່ານີ້ເປັນເຊັ່ນນີ້ ແລ້ວມັນຈະບໍ່ແມ່ນຄວາມຈິງບໍ ທີ່ວ່າຜູ້ຍິງທຸກຄົນທີ່ຖືກສ້າງໂດຍພຣະເຢໂຮວາ ແລະ ຜູ້ທີ່ຖືກເສື່ອມໂຊມຈະບໍ່ໄດ້ມີໂອກາດຖືກຊ່ວຍໃຫ້ລອດພົ້ນໄດ້? ຖ້າເປັນເຊັ່ນນັ້ນ ມັນຈະບໍ່ມີຄວາມໝາຍຫຍັງທີ່ພຣະເຢໂຮວາສ້າງຜູ້ຍິງ ນັ້ນກໍຄື ສ້າງເອວາຂຶ້ນມາ ແມ່ນບໍ່? ແລ້ວຜູ້ຍິງຈະບໍ່ຈິບຫາຍຊົ່ວກາລະນານບໍ? ຍ້ອນສາເຫດນີ້, ຂັ້ນຕອນຂອງພາລະກິດໃນຍຸກສຸດທ້າຍຈຶ່ງໄດ້ຖືກດຳເນີນການເພື່ອຊ່ວຍມະນຸດທຸກຄົນໃຫ້ລອດພົ້ນ, ບໍ່ແມ່ນພຽງຊ່ວຍແຕ່ຜູ້ຍິງເທົ່ານັ້ນ. ຖ້າທຸກຄົນຄິດວ່າພຣະເຈົ້າຕ້ອງບັງເກີດເປັນຜູ້ຍິງ ມັນກໍພຽງແຕ່ຊ່ວຍໃຫ້ຜູ້ຍິງລອດພົ້ນເທົ່ານັ້ນ, ແນ່ນອນ ຄົນນັ້ນແມ່ນໂງ່ຈ້າ.

ພາລະກິດໃນປັດຈຸບັນໄດ້ຊຸກຍູ້ພາລະກິດຂອງຍຸກແຫ່ງພຣະຄຸນ ນັ້ນກໍຄືພາລະກິດພາຍໃຕ້ແຜນການຄຸ້ມຄອງຫົກພັນປີທັງໝົດໄດ້ສືບຕໍ່ກ້າວໄປຂ້າງໜ້າ. ເຖິງແມ່ນວ່າ ຍຸກແຫ່ງພຣະຄຸນໄດ້ສິ້ນສຸດລົງ ມັນກໍມີຄວາມຄືບໜ້າຕໍ່ໄປໃນພາລະກິດຂອງພຣະເຈົ້າ. ເປັນຫຍັງເຮົາຈຶ່ງເວົ້າແລ້ວເວົ້າອີກວ່າພາລະກິດຍຸກນີ້ສ້າງຂຶ້ນບົນຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງພຣະບັນຍັດ? ຍ້ອນພາລະກິດທຸກມື້ນີ້ແມ່ນການສືບຕໍ່ຈາກພາລະກິດທີ່ປະຕິບັດໃນຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງພຣະບັນຍັດ. ສາມຍຸກແມ່ນເຊື່ອມຕໍ່ກັນຢ່າງແໜ້ນແຟ້ນ ໂດຍທີ່ແຕ່ລະຂໍ້ຕໍ່ໃນໂສ້ເຊື່ອມໂຍງກັນຢ່າງໃກ້ຊິດ. ເປັນຫຍັງເຮົາຈຶ່ງເວົ້າອີກວ່າ ພາລະກິດຍຸກນີ້ສ້າງຂຶ້ນດ້ວຍການກະທຳຂອງພຣະເຢຊູ? ສົມມຸດວ່າພາລະກິດຍຸກນີ້ບໍ່ໄດ້ສ້າງຂຶ້ນດ້ວຍການກະທຳຂອງພຣະເຢຊູ ການໄຖ່ບາບດ້ວຍການຄຶງໃສ່ໄມ້ກາງແຂນກໍຈະເກີດຂຶ້ນອີກໃນຍຸກນີ້ ແລະ ພາລະກິດການໄຖ່ບາບຈາກຍຸກຜ່ານມາກໍຈະຕ້ອງໄດ້ເຮັດຄືນໃໝ່ໝົດ. ນີ້ຈະບໍ່ມີຄວາມໝາຍຫຍັງໝົດ. ນັ້ນໝາຍຄວາມວ່າພາລະກິດບໍ່ໄດ້ເຮັດສຳເລັດທັງໝົດ ແຕ່ຍຸກນີ້ຜັດກ້າວໄປຂ້າງໜ້າ ເຮັດໃຫ້ລະດັບຂອງພາລະກິດຍົກສູງຂຶ້ນຫຼາຍກວ່າເກົ່າ. ມັນສາມາດເວົ້າໄດ້ອີກວ່າ ພາລະກິດຍຸກນີ້ແມ່ນສ້າງຂຶ້ນບົນຮາກຖານຂອງຍຸກແຫ່ງພຣະບັນຍັດ ແລະ ເທິງກ້ອນຫີນແຫ່ງພາລະກິດການໄຖ່ບາບຂອງພຣະເຢຊູ. ພາລະກິດຂອງພຣະເຈົ້າຖືກສ້າງຂຶ້ນເທື່ອລະຍຸກ ແລະ ຍຸກນີ້ບໍ່ແມ່ນຍຸກເລີ່ມຕົ້ນ. ການປະສົມປະສານກັນລະຫວ່າງພາລະກິດສາມຍຸກເທົ່ານັ້ນຈຶ່ງສາມາດຖືວ່າເປັນແຜນການຄຸ້ມຄອງຫົກພັນປີ. ພາລະກິດໃນຂັ້ນຕອນນີ້ແມ່ນປະຕິບັດບົນພື້ນຖານຂອງພາລະກິດຂອງຍຸກແຫ່ງພຣະຄຸນ. ຖ້າສອງຂັ້ນຕອນຂອງພາລະກິດເຫຼົ່ານີ້ບໍ່ກ່ຽວຂ້ອງກັນ ແລ້ວເຫດໃດການຖືກຄຶງເທິງໄມ້ກາງແຂນຈຶ່ງບໍ່ເກີດຂຶ້ນອີກໃນຍຸກນີ້? ເປັນຫຍັງເຮົາຈຶ່ງບໍ່ແບກຮັບເອົາບາບຂອງມະນຸດ, ແຕ່ກົງກັນຂ້າມ ເຮົາໄດ້ມາເພື່ອພິພາກສາ ແລະ ຂ້ຽນຕີມະນຸດໂດຍກົງ? ຖ້າພາລະກິດຂອງເຮົາໃນການພິພາກສາ ແລະ ຂ້ຽນຕີມະນຸດບໍ່ໄດ້ຕິດຕາມການຖືກຄຶງເທິງໄມ້ກາງແຂນ, ໂດຍທີ່ການມາເຖິງຂອງເຮົາໃນຕອນນີ້ບໍ່ໄດ້ເກີດຂຶ້ນຈາກພຣະວິນຍານບໍລິສຸດ, ແລ້ວເຮົາກໍຈະບໍ່ມີຄຸນສົມບັດໃຫ້ພິພາກສາ ແລະ ຂ້ຽນຕີມະນຸດ. ມັນເປັນຍ້ອນເຮົາເປັນໜຶ່ງດຽວກັບພຣະເຢຊູແທ້ໆ ເຮົາຈຶ່ງມາເພື່ອຂ້ຽນຕີ ແລະ ພິພາກສາມະນຸດໂດຍກົງ. ພາລະກິດໃນຂັ້ນຕອນນີ້ແມ່ນສ້າງຂຶ້ນທັງໝົດອີງຕາມພາລະກິດໃນຂັ້ນຕອນຜ່ານມາ. ເພາະສະນັ້ນມີພຽງພາລະກິດປະເພດນີ້ເທົ່ານັ້ນທີ່ສາມາດນຳພາມະນຸດເຂົ້າສູ່ຄວາມລອດພົ້ນໄດ້ ໂດຍເທື່ອລະກ້າວ. ພຣະເຢຊູ ແລະ ເຮົາມາຈາກພຣະວິນຍານອົງດຽວກັນ. ເຖິງແມ່ນວ່າ ພວກເຮົາບໍ່ໄດ້ກ່ຽວຂ້ອງກັນໃນ

ເນື້ອໜັງພວກເຮົາ, ແຕ່ວ່າພຣະວິນຍານຂອງພວກເຮົາແມ່ນອົງດຽວກັນ; ເຖິງແມ່ນວ່າເນື້ອຫາຂອງສິ່ງທີ່ພວກເຮົາກະທຳ ແລະ ພາລະກິດທີ່ພວກເຮົາດຳເນີນຈະບໍ່ຄືກັນ, ແຕ່ພວກເຮົາແມ່ນຄືກັນໃນດ້ານແກ່ນແທ້; ເນື້ອໜັງຂອງພວກເຮົາແມ່ນຢູ່ໃນຮູບແບບທີ່ແຕກຕ່າງກັນ, ແຕ່ນີ້ແມ່ນຍ້ອນການປ່ຽນແປງໃນຍຸກ ແລະ ຄວາມຕ້ອງການຂອງພາລະກິດຂອງພວກເຮົາທີ່ແຕກຕ່າງກັນ; ພັນທະກິດຂອງພວກເຮົາບໍ່ຄືກັນ ດັ່ງນັ້ນພາລະກິດທີ່ພວກເຮົານຳມາ ແລະ ອຸປະນິໄສທີ່ພວກເຮົາເປີດເຜີຍຕໍ່ມະນຸດແມ່ນແຕກຕ່າງເຊັ່ນກັນ. ນັ້ນຄືເຫດຜົນທີ່ມະນຸດເຫັນ ແລະ ເຂົ້າໃຈວ່າ ມື້ນີ້ແມ່ນບໍ່ຄືສິ່ງທີ່ຜ່ານມາ, ນີ້ເປັນຍ້ອນການປ່ຽນແປງໃນຍຸກ. ເຖິງວ່າພຣະອົງທັງສອງຈະມີຄວາມແຕກຕ່າງທາງເພດ ແລະ ຮູບຮ່າງດ້ານເນື້ອໜັງພຣະອົງທັງສອງ ເຊິ່ງພຣະອົງທັງສອງບໍ່ໄດ້ບັງເກີດຈາກຄອບຄົວດຽວກັນ, ແຮງໄກທີ່ຢູ່ໃນຊ່ວງເວລາດຽວກັນອີກ, ແຕ່ເຖິງຢ່າງນັ້ນກໍຕາມ ພຣະວິນຍານຂອງພຣະອົງທັງສອງແມ່ນເປັນອົງດຽວກັນ. ເຖິງວ່າເນື້ອໜັງຂອງພຣະອົງທັງສອງບໍ່ໄດ້ມີເລືອດ ຫຼື ຄວາມສຳພັນທາງຮ່າງກາຍຊະນິດໃດໜຶ່ງ, ແຕ່ມັນກໍບໍ່ສາມາດປະຕິເສດໄດ້ວ່າ ພຣະອົງທັງສອງຄືເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າໃນສອງຊ່ວງເວລາທີ່ແຕກຕ່າງກັນ. ການທີ່ພຣະອົງທັງສອງບັງເກີດເປັນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້ານັ້ນ ເປັນຄວາມຈິງທີ່ໂຕ້ແຍ້ງບໍ່ໄດ້. ເຖິງຢ່າງໃດກໍ່ຕາມ ພຣະອົງທັງສອງບໍ່ແມ່ນສາຍເລືອດດຽວກັນ ແລະ ບໍ່ໄດ້ເວົ້າພາສາດຽວກັນ (ຜູ້ໜຶ່ງເປັນເພດຊາຍທີ່ເວົ້າພາສາຢິວ ແລະ ອີກຄົນໜຶ່ງເປັນເພດຍິງທີ່ເວົ້າແຕ່ພາສາຈີນເທົ່ານັ້ນ). ຍ້ອນສາເຫດເຫຼົ່ານີ້ ທີ່ພຣະອົງທັງສອງຈຶ່ງໄດ້ດຳລົງຊີວິດຢູ່ໃນປະເທດທີ່ແຕກຕ່າງກັນ ແລະ ໃນຊ່ວງເວລາທີ່ແຕກຕ່າງກັນເຊັ່ນກັນ ເພື່ອປະຕິບັດພາລະກິດທີ່ເຮັດໃຫ້ແຕ່ລະອົງໄດ້ປະຕິບັດ. ເຖິງແມ່ນວ່າ ພຣະອົງທັງສອງຈະເປັນພຣະວິນຍານອົງດຽວກັນກໍຕາມ, ມີແກ່ນແທ້ຄືກັນ, ແຕ່ຮູບຮ່າງພາຍນອກຂອງພຣະອົງທັງສອງແມ່ນບໍ່ມີຄວາມຄ້າຍຄືກັນຈັກໜ້ອຍເລີຍ. ສິ່ງທີ່ພຣະອົງທັງສອງມີຄວາມຄ້າຍຄືກັນກໍມີພຽງຄວາມເປັນມະນຸດເທົ່ານັ້ນ, ແຕ່ເທົ່າທີ່ກ່ຽວກັບລັກສະນະພາຍນອກຂອງເນື້ອໜັງຂອງພຣະອົງທັງສອງ ແລະ ສະພາບການກຳເນີດຂອງພຣະອົງທັງສອງ, ພຣະອົງທັງສອງແມ່ນບໍ່ຄືກັນ. ສິ່ງເຫຼົ່ານີ້ບໍ່ໄດ້ມີຜົນກະທົບຕໍ່ພາລະກິດໃຜລາວຂອງພຣະອົງທັງສອງ ຫຼື ຕໍ່ຄວາມຮູ້ທີ່ມະນຸດມີກ່ຽວກັບພຣະອົງທັງສອງ, ຍ້ອນວ່າ ໃນການວິເຄາະຂັ້ນສຸດທ້າຍກໍຈະເຫັນວ່າ ພຣະອົງທັງສອງແມ່ນເປັນພຣະວິນຍານອົງດຽວກັນ ແລະ ບໍ່ມີໃຜສາມາດແຍກພຣະອົງທັງສອງອອກຈາກກັນໄດ້. ເຖິງແມ່ນວ່າພຣະອົງທັງສອງຈະບໍ່ກ່ຽວຂ້ອງກັນທາງສາຍເລືອດ, ແຕ່ຊີວິດທັງໝົດຂອງພຣະອົງທັງສອງແມ່ນຄວບຄຸມພຣະວິນຍານຂອງພຣະອົງທັງສອງ ເຊິ່ງມອບໝາຍພາລະກິດທີ່ແຕກຕ່າງກັນໃຫ້ພຣະອົງທັງສອງນຳໄປປະຕິບັດຢູ່ໃນຊ່ວງເວລາທີ່ແຕກຕ່າງກັນ ແລະ ເນື້ອໜັງຂອງພຣະອົງທັງສອງກໍ່ມາຈາກສາຍເລືອດທີ່ຕ່າງກັນ. ພຣະວິນຍານຂອງພຣະເຢໂຮວາກໍບໍ່ແມ່ນພໍ່ຂອງພຣະວິນຍານຂອງພຣະເຢຊູ ແລະ ພຣະວິນຍານຂອງພຣະເຢຊູກໍບໍ່ແມ່ນບຸດຊາຍຂອງພຣະວິນຍານຂອງພຣະເຢໂຮວາ: ພຣະອົງທັງສອງຄືໜຶ່ງດຽວ ແລະ ເປັນພຣະວິນຍານອົງດຽວກັນ. ໃນທຳນອງດຽວກັນ ພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດໃນປັດຈຸບັນ ແລະ ພຣະເຢຊູບໍ່ໄດ້ກ່ຽວຂ້ອງກັນທາງສາຍເລືອດ, ແຕ່ພຣະອົງທັງສອງຄືອົງດຽວກັນ ນີ້ກໍຍ້ອນວ່າພຣະວິນຍານຂອງພຣະອົງທັງສອງແມ່ນອັນ

ດຽວກັນ. ພຣະເຈົ້າສາມາດປະຕິບັດພາລະກິດແຫ່ງຄວາມເມດຕາ ແລະ ຄວາມຮັກກະລຸນາ ພ້ອມດ້ວຍການພິພາກສາທີ່ທ່ຽງທຳ ແລະ ການຂ້ຽນຕີມະນຸດ ແລະ ການສາບແຊ່ງມະນຸດ; ແລະໃນທີ່ສຸດ ພຣະອົງສາມາດປະຕິບັດພາລະກິດແຫ່ງການທຳລາຍໂລກ ແລະ ລົງໂທດຄົນຊົ່ວ. ພຣະອົງບໍ່ໄດ້ກະທຳທັງໝົດນີ້ດ້ວຍຕົນເອງບໍ? ແລ້ວນີ້ບໍ່ແມ່ນອຳນາດອັນໄພສານຂອງພຣະເຈົ້າບໍ? ພຣະອົງສາມາດປະກາດໃຊ້ກົດເກນເພື່ອມະນຸດ ແລະ ອອກກົດບັນຍັດໃຫ້ແກ່ພວກເຂົາ ແລະ ພ້ອມນີ້ ພຣະອົງຍັງສາມາດນຳພາຊາວອິດສະຣາເອນຊ່ວງທຳອິດໃຊ້ຊີວິດຂອງພວກເຂົາເທິງແຜ່ນດິນໂລກ ແລະ ຊີ້ນຳພວກເຂົາໃຫ້ສ້າງພຣະວິຫານ ແລະ ແທ່ນບູຊາ, ຄຸມຊາວອິດສະຣາເອນທຸກຄົນໃຫ້ຢູ່ພາຍໃຕ້ອຳນາດຂອງພຣະອົງ. ດ້ວຍສິດອຳນາດຂອງພຣະອົງ, ພຣະອົງດຳລົງຢູ່ເທິງແຜ່ນດິນໂລກນີ້ກັບຊາວອິດສະຣາເອນເປັນເວລາສອງພັນປີ. ຊາວອິດສະຣາເອນບໍ່ກ້າກະບົດຕໍ່ພຣະອົງ; ທຸກຄົນເຄົາລົບບູຊາພຣະເຢໂຮວາ ແລະ ປະຕິບັດຕາມກົດບັນຍັດຂອງພຣະອົງ. ນີ້ແມ່ນພາລະກິດທີ່ໄດ້ກະທຳອີງຄຸນງາມຄວາມດີແຫ່ງສິດອຳນາດຂອງພຣະອົງ ແລະ ອຳນາດອັນໄພສານຂອງພຣະອົງ. ຫລັງຈາກນັ້ນ ໃນລະຫວ່າງຍຸກແຫ່ງພຣະຄຸນພຣະເຢຊູລົງມາເພື່ອໄຖ່ບາບໃຫ້ກັບມະນຸດຊາດທີ່ເສື່ອມໂຊມ (ແລະ ບໍ່ມີແຕ່ຊົນຊາດອິດສະຣາເອນເທົ່ານັ້ນ). ພຣະອົງສະແດງຄວາມເມດຕາ ແລະ ຄວາມຮັກກະລຸນາຕໍ່ມະນຸດ. ພຣະເຢຊູທີ່ມະນຸດເຫັນໃນຍຸກແຫ່ງພຣະຄຸນນັ້ນ ແມ່ນເຕັມໄປດ້ວຍຄວາມຮັກກະລຸນາ ແລະ ມີຄວາມຮັກໄຄ່ຕໍ່ມະນຸດສະເໝີດ້ວຍວ່າພຣະອົງໄດ້ລົງມາເພື່ອຊ່ວຍມະນຸດໃຫ້ພົ້ນບາບ. ພຣະອົງສາມາດອະໄພບາບໃຫ້ແກ່ມະນຸດຈົນກວ່າການໄຖ່ບາບທີ່ຖືກຄຶງໃສ່ໄມ້ກາງແຂນຂອງພຣະອົງໄດ້ໄຖ່ມະນຸດຈາກຄວາມບາບຢ່າງສົມບູນ. ໃນໄລຍະນີ້ ພຣະເຈົ້າປາກົດຕົວຕໍ່ໜ້າມະນຸດດ້ວຍຄວາມເມດຕາ ແລະ ຄວາມຮັກກະລຸນານັ້ນກໍຄື ພຣະອົງກາຍເປັນຜູ້ຖວາຍບາບໃຫ້ແກ່ມະນຸດ ແລະ ຖືກຄຶງໃສ່ໄມ້ກາງແຂນເພື່ອໄຖ່ບາບໃຫ້ແກ່ມະນຸດ ເພື່ອວ່າພວກເຂົາຈະໄດ້ຮັບການໃຫ້ອະໄພເປັນນິດລັນດອນ. ພຣະອົງມີຄວາມເມດຕາ, ຄວາມກະລຸນາ, ຄວາມອົດທົນ ແລະ ຄວາມຮັກ. ເຊັ່ນດຽວກັນ ຜູ້ຄົນທີ່ຕິດຕາມພຣະເຢຊູໃນຍຸກແຫ່ງພຣະຄຸນ ແມ່ນພາກັນສະແຫວງຫາຄວາມໝັ້ນຄົງ ແລະ ຄວາມຮັກໃນທຸກໆສິ່ງ. ພວກເຂົາໄດ້ທົນທຸກທໍລະມານ ແລະ ບໍ່ເຄີຍ ຕອບໂຕ້ຄືນເມື່ອຖືກຕົບຕີ, ຖືກປ້ອຍດ່າ ຫຼື ຖືກແກວ່ງໝາກຫີນໃສ່. ແຕ່ວ່າ, ໃນລະຫວ່າງຂັ້ນຕອນສຸດທ້າຍນີ້ຈະບໍ່ເປັນແບບນັ້ນອີກຕໍ່ໄປ. ເຖິງແມ່ນວ່າພຣະວິນຍານຂອງພຣະອົງທັງສອງຈະເປັນອົງດຽວກັນ, ແຕ່ພາລະກິດຂອງພຣະເຢຊູ ແລະ ພຣະເຢໂຮວາແມ່ນບໍ່ໄດ້ຄືກັນທັງໝົດ. ພາລະກິດຂອງພຣະເຢໂຮວາບໍ່ແມ່ນເພື່ອນຳເອົາຍຸກໄປສູ່ການສິ້ນສຸດ ແຕ່ເພື່ອຊີ້ນຳຍຸກ, ເລີ່ມຕົ້ນຊີວິດຂອງມະນຸດຊາດເທິງແຜ່ນດິນໂລກ ແລະ ພາລະກິດໃນມື້ນີ້ແມ່ນເພື່ອເອົາຊະນະຄົນທີ່ຢູ່ຕ່າງຊາດທີ່ຖືກເຮັດເສື່ອມຊາມຢ່າງຮຸນແຮງ ແລະ ບໍ່ພຽງແຕ່ເພື່ອນຳພາຜູ້ຄົນທີ່ຖືກເລືອກໃນປະເທດຈີນ ແຕ່ຈັກກະວານທັງປວງ ແລະ ມະນຸດຊາດທັງປວງ. ເຈົ້າອາດເຫັນວ່າພາລະກິດນີ້ແມ່ນກຳລັງປະຕິບັດຢູ່ໃນປະເທດຈີນເທົ່ານັ້ນ, ແຕ່ໃນຄວາມເປັນຈິງແລ້ວ, ພາລະກິດດັ່ງກ່າວນີ້ໄດ້ເລີ່ມຂະຫຍາຍໄປຍັງຕ່າງປະເທດແລ້ວ. ເຫດໃດຜູ້ຄົນທີ່ຢູ່ນອກປະເທດຈີນຈຶ່ງສະແຫວງຫາຫົນທາງທີ່ແທ້ຈິງນີ້ຄັ້ງແລ້ວຄັ້ງເລົ່າ? ນັ້ນກໍຍ້ອນວ່າ ພຣະວິນຍານໄດ້ຕຽມພ້ອມປະຕິບັດພາລະກິດແລ້ວ ແລະ ພຣະທຳທີ່ກຳລັງກ່າວໃນ

ປັດຈຸບັນແມ່ນແນໃສ່ຜູ້ຄົນທົ່ວຈັກກະວານ. ດ້ວຍວິທີນີ້ ເຄິ່ງໜຶ່ງຂອງພາລະກິດແມ່ນກຳລັງດຳເນີນການ. ເລີ່ມແຕ່ການສ້າງໂລກຈົນເຖິງປັດຈຸບັນ ພຣະວິນຍານຂອງພຣະເຈົ້າໄດ້ດຳເນີນພາລະກິດອັນຍິ່ງໃຫຍ່ນີ້ ແລະ ຍິ່ງໄປກວ່ານັ້ນ ພຣະອົງຍັງໄດ້ກະທຳຕ່າງພາລະກິດທີ່ແຕກຕ່າງກັນໃນຍຸກທີ່ແຕກຕ່າງກັນ ແລະ ທ່າມກາງຊາດຕ່າງໆອີກດ້ວຍ. ຜູ້ຄົນໃນແຕ່ລະຍຸກຈະເຫັນອຸປະນິໄສຂອງພຣະອົງທີ່ແຕກຕ່າງກັນໄປ ເຊິ່ງຖືກເປີດເຜີຍຢ່າງທຳມະຊາດຜ່ານພາລະກິດແຕກຕ່າງກັນທີ່ພຣະອົງກະທຳ. ພຣະອົງຄືພຣະເຈົ້າທີ່ເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກກະລຸນາ; ພຣະອົງເປັນເຄື່ອງບູຊາແທນຄວາມຜິດບາບໃຫ້ແກ່ມະນຸດ ແລະ ເປັນຜູ້ເບິ່ງແຍງດູແລມະນຸດ; ແຕ່ພຣະອົງຍັງເປັນການພິພາກສາ, ການຂ້ຽນຕີ ແລະ ການສາບແຊ່ງຂອງມະນຸດອີກດ້ວຍ. ພຣະອົງສາມາດນຳພາມະນຸດໃຊ້ຊີວິດຢູ່ໃນແຜ່ນດິນໂລກເປັນເວລາສອງພັນປີ ແລະ ພຣະອົງຍັງສາມາດໄຖ່ມະນຸດຊາດທີ່ເສື່ອມໂຊມຈາກຄວາມຜິດບາບ. ປັດຈຸບັນນີ້, ພຣະອົງຍັງສາມາດເອົາຊະນະມະນຸດຊາດຜູ້ທີ່ບໍ່ຮູ້ຈັກພຣະອົງ ແລະ ເຮັດໃຫ້ພວກເຂົາມາຢູ່ພາຍໃຕ້ອຳນາດຂອງພຣະອົງ ເພື່ອວ່າທຸກຄົນຈະຍອມອ່ອນນ້ອມຕໍ່ພຣະອົງຢ່າງສົມບູນ. ໃນທີ່ສຸດ ພຣະອົງຈະເຜົາທຳລາຍທຸກສິ່ງທີ່ບໍ່ສະອາດ ແລະ ບໍ່ທ່ຽງທຳໃນບັນດາມະນຸດທົ່ວຈັກກະວານ ເພື່ອສະແດງໃຫ້ພວກເຂົາເຫັນວ່າ ພຣະອົງບໍ່ແມ່ນພຽງແຕ່ເປັນພຣະເຈົ້າທີ່ມີຄວາມເມດຕາ ແລະ ຄວາມຮັກ, ບໍ່ແມ່ນພຽງແຕ່ເປັນພຣະເຈົ້າທີ່ມີສະຕິປັນຍາ ແລະ ຄວາມມະຫັດສະຈັນ, ບໍ່ແມ່ນພຽງແຕ່ເປັນພຣະເຈົ້າທີ່ສັກສິດ, ແຕ່ວ່າຍິ່ງໄປກວ່ານັ້ນ ພຣະອົງຄືພຣະເຈົ້າຜູ້ຕັດສິນມະນຸດ. ສຳລັບຜູ້ທີ່ຊົ່ວຊ້າທັງຫຼາຍໃນບັນດາມະນຸດ ພຣະອົງຄືການເຜົາທຳລາຍ, ການພິພາກສາ ແລະ ການລົງໂທດ; ສຳລັບຜູ້ທີ່ຈະຖືກເຮັດໃຫ້ສົມບູນແບບ ພຣະອົງຄືຄວາມລຳບາກຍາກແຄ້ນ, ການຫຼໍ່ຫຼອມ ແລະ ການທົດລອງ ພ້ອມດ້ວຍໃຫ້ຄວາມອົບອຸ່ນ, ການສະໜັບສະໜູນ, ການສະໜອງແຫ່ງພຣະທຳ, ການຈັດການ ແລະ ການລິຮານ; ແລະ ສຳລັບຜູ້ທີ່ຈະຖືກກຳຈັດ, ພຣະອົງຄືການລົງໂທດ ແລະ ຄວາມລຳບາກຍາກແຄ້ນ. ບອກເຮົາມາເບິ່ງວ່າ ພຣະເຈົ້າບໍ່ມີລິດທານຸພາບສູງສຸດບໍ? ພຣະອົງສາມາດກະທຳໄດ້ທຸກສິ່ງຢ່າງ ແລະ ທຸກພາລະກິດ, ບໍ່ແມ່ນພຽງແຕ່ການຖືກຄຶງໃສ່ໄມ້ກາງແຂນທີ່ເຈົ້າຈິນຕະນາການເຫັນເທົ່ານັ້ນ. ເຈົ້າດູຖູກພຣະເຈົ້າເກີນໄປ! ເຈົ້າເຊື່ອວ່າພຣະອົງພຽງສາມາດໄຖ່ບາບໃຫ້ແກ່ມວນມະນຸດໂດຍຜ່ານການຄຶງໃສ່ໄມ້ກາງແຂນ ແລະ ມັນໝົດສໍ່ານັ້ນບໍ? ແລ້ວຫຼັງຈາກນັ້ນ, ເຈົ້າກໍຈະຕິດຕາມພຣະອົງໄປສູ່ສະຫວັນເພື່ອກິນໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ ແລະ ດື່ມຈາກແມ່ນໍ້າແຫ່ງຊີວິດບໍ? ... ມັນຈະງ່າຍດາຍປານນັ້ນພຸ້ນບໍ? ບອກເຮົາມາເບິ່ງ, ມີສິ່ງໃດແດ່ທີ່ເຈົ້າບັນລຸຜົນສຳເລັດ? ເຈົ້າມີຊີວິດຂອງພຣະເຢຊູບໍ? ແນ່ນອນ ເຈົ້າຖືກໄຖ່ບາບໂດຍພຣະອົງ ແຕ່ການຖືກຄຶງໃສ່ໄມ້ກາງແຂນແມ່ນພາລະກິດຂອງພຣະເຢຊູເອງ. ເຈົ້າໄດ້ເຮັດສຳເລັດໜ້າທີ່ຫຍັງແດ່ໃນຖານະທີ່ເປັນມະນຸດ? ເຈົ້າພຽງແຕ່ມີຄວາມສັດທາພາຍນອກ ແຕ່ເຈົ້າບໍ່ເຂົ້າໃຈຫົນທາງຂອງພຣະອົງ. ນັ້ນບໍ ຄືວິທີທີ່ເຈົ້າສະແດງເຖິງພຣະອົງ? ຖ້າເຈົ້າຍັງບໍ່ທັນໄດ້ຮັບຊີວິດຂອງພຣະເຈົ້າ ຫຼື ໄດ້ເຫັນອຸປະນິໄສທີ່ທ່ຽງທຳທັງໝົດຂອງພຣະອົງ ເຈົ້າຈະບໍ່ສາມາດອ້າງວ່າຕົນເອງມີຊີວິດ ແລະ ເຈົ້າບໍ່ເໝາະສົມທີ່ຈະຜ່ານປະຕູໂຂງຂອງອານາຈັກແຫ່ງສະຫວັນນີ້ໄປ.

ພຣະເຈົ້າບໍ່ພຽງແຕ່ເປັນພຣະວິນຍານເທົ່ານັ້ນ ພຣະອົງຍັງສາມາດກາຍເປັນເນື້ອໜັງໄດ້; ຍິ່ງໄປກວ່ານັ້ນ, ພຣະອົງຄືຮ່າງກາຍຂອງຄວາມສະຫງ່າລາສີ. ເຖິງແມ່ນວ່າ ພວກເຈົ້າບໍ່ເຄີຍເຫັນພຣະເຢຊູ, ແຕ່ພຣະເຢຊູກໍໄດ້ເປັນທີ່ປະຈັກຕໍ່ຊາວອິດສະຣາເອນ ເຊິ່ງກໍຄືພວກຢິວໃນເວລານັ້ນ. ທຳອິດ ພຣະອົງເປັນພຽງຮ່າງກາຍຝ່າຍເນື້ອໜັງ, ແຕ່ຫຼັງຈາກພຣະອົງຖືກຄຶງໃສ່ໄມ້ກາງແຂນ ພຣະອົງກໍກາຍເປັນຮ່າງກາຍແຫ່ງສະຫງ່າລາສີ. ພຣະອົງຄືພຣະວິນຍານທີ່ປົກຄຸມທຸກສິ່ງ ແລະ ສາມາດປະຕິບັດພາລະກິດໄດ້ໃນທຸກຫົນແຫ່ງ. ພຣະອົງສາມາດເປັນພຣະເຢໂຮວາ ຫຼື ເປັນພຣະເຢຊູ ຫຼື ພຣະເມຊີອາ; ໃນທີ່ສຸດພຣະອົງຍັງສາມາດເປັນພຣະເຈົ້າອົງຊົງລິດທານຸພາບສູງສຸດອີກດ້ວຍ. ພຣະອົງຄືຄວາມທ່ຽງທຳ, ການພິພາກສາ ແລະ ການຂ້ຽນຕີ; ພຣະອົງຄືຄວາມສາບແຊ່ງ ແລະ ຄວາມໂກດຮ້າຍ; ແຕ່ພ້ອມນີ້ ພຣະອົງຍັງເປັນຄວາມເມດຕາ ແລະ ຄວາມຮັກກະລຸນາອີກດ້ວຍ. ພາລະກິດທຸກຢ່າງທີ່ພຣະອົງກະທຳສາມາດເປັນຕົວແທນຂອງພຣະອົງໄດ້. ເຈົ້າຄິດວ່າພຣະອົງເປັນພຣະເຈົ້າໃນລັກສະນະແບບໃດ? ເຈົ້າບໍ່ສາມາດອະທິບາຍໄດ້. ຖ້າເຈົ້າບໍ່ສາມາດອະທິບາຍໄດ້ຢ່າງແທ້ຈິງ, ເຈົ້າກໍບໍ່ຄວນສະຫຼຸບກ່ຽວກັບພຣະເຈົ້າ. ບໍ່ຕ້ອງຟ້າວສະຫຼຸບວ່າພຣະເຈົ້າເປັນພຣະເຈົ້າຂອງຄວາມເມດຕາ ແລະ ຄວາມຮັກກະລຸນາຢູ່ຕະຫຼອດໄປຍ້ອນພຽງແຕ່ພຣະອົງກະທຳພາລະກິດການໄຖ່ບາບໃນຂັ້ນຕອນດຽວເທົ່ານັ້ນ. ເຈົ້າໝັ້ນໃຈບໍ່ວ່າພຣະອົງເປັນພຣະເຈົ້າທີ່ເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກ? ຖ້າພຣະອົງເປັນພຣະເຈົ້າທີ່ເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກ, ແລ້ວເຫດໃດພຣະອົງຈຶ່ງຈະນຳເອົາຍຸກໄປສູ່ຈຸດຈົບໃນຍຸກສຸດທ້າຍ? ເຫດໃດພຣະອົງຈຶ່ງສົ່ງໄພພິບັດມາຍັງໂລກນີ້ຢ່າງຫຼວງຫຼາຍ? ອີງຕາມແນວຄິດ ແລະ ຄວາມຄິດຂອງຜູ້ຄົນ, ພຣະອົງຄວນມີຄວາມເມດຕາ ແລະ ຄວາມຮັກຈົນເຖິງທີ່ສຸດ ເພື່ອວ່າສະມາຊິກຄົນສຸດທ້າຍຂອງມະນຸດຊາດຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ແຕ່ໃນຍຸກສຸດທ້າຍ, ເປັນຫຍັງພຣະອົງຈຶ່ງຈະສົ່ງໄພພິບັດທີ່ໃຫຍ່ຫຼວງ ເຊັ່ນ: ແຜ່ນດິນໄຫວ, ໂລກລະບາດ ແລະ ໄພອຶດຢາກມາເພື່ອທຳລາຍມະນຸດຊາດທີ່ຊົ່ວຮ້າຍນີ້ ທີ່ຖືວ່າພຣະເຈົ້າເປັນສັດຕູ? ເປັນຫຍັງພຣະອົງຈຶ່ງຍອມໃຫ້ມະນຸດທົນທຸກກັບໄພພິບັດເຫຼົ່ານີ້? ສຳລັບພຣະອົງເປັນພຣະເຈົ້າໃນລັກສະນະແບບໃດນັ້ນ ບໍ່ມີໃຜໃນບັນດາພວກເຈົ້າກ້າເວົ້າ ແລະ ບໍ່ມີຜູ້ໃດອະທິບາຍໄດ້. ເຈົ້າກ້າເວົ້າບໍວ່າພຣະອົງຄືພຣະວິນວິນຍານຢ່າງແທ້ຈິງ? ເຈົ້າກ້າເວົ້າບໍວ່າ ພຣະອົງເປັນພຽງເນື້ອໜັງຂອງພຣະເຢຊູ? ແລ້ວເຈົ້າກ້າເວົ້າບໍ່ວ່າ ພຣະອົງຄືພຣະເຈົ້າຜູ້ທີ່ຈະຖືກຄຶງເທິງໄມ້ກາງແຂນເພື່ອເຫັນແກ່ຜົນປະໂຫຍດຂອງມະນຸດຕະຫຼອດໄປເປັນນິດ?

# ພຣະເຈົ້າຕຣີເອການຸພາບມີແທ້ບໍ?

ຫຼັງຈາກຄວາມຈິງຂອງພຣະເຢຊູໄດ້ກາຍມາເປັນເນື້ອໜັງ, ມະນຸດກໍ່ເຊື່ອວ່າໃນສະຫວັນແມ່ນບໍ່ໄດ້ມີພຽງແຕ່ພຣະບິດາ, ແຕ່ຍັງມີພຣະບຸດ ແລະ ແມ່ນແຕ່ພຣະວິນຍານ. ນີ້ຄືແນວຄິດຕາມປະເພນີທີ່ມະນຸດມີ ຄືມີພຣະເຈົ້າແບບນີ້ທີ່ຢູ່ໃນສະຫວັນ: ພຣະເຈົ້າຕຣີເອການຸພາບທີ່ເປັນພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ. ມະນຸດຊາດທັງປວງມີແນວຄິດເຫຼົ່ານີ້: ພຣະເຈົ້າເປັນພຣະເຈົ້າອົງດຽວ, ແຕ່ປະກອບມີສາມພາກສ່ວນ ເຊິ່ງທຸກຄົນເຫຼົ່ານັ້ນທີ່ຝັງເລິກຢ່າງໜ້າເສົ້າໃຈຢູ່ກັບແນວຄິດດັ່ງເດີມຖືວ່າມີພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ. ມີພຽງແຕ່ສາມສ່ວນເຫຼົ່ານັ້ນລວມກັນເປັນໜຶ່ງເທົ່ານັ້ນຈຶ່ງຈະເປັນພຣະເຈົ້າທັງໝົດ. ຫາກປາສະຈາກພຣະບິດາບໍລິສຸດ, ພຣະເຈົ້າກໍຈະບໍ່ສົມບູນ. ໃນທຳນອງດຽວກັນ, ພຣະເຈົ້າກໍຈະບໍ່ສົມບູນເຊັ່ນກັນ ຖ້າປາສະຈາກພຣະບຸດ ຫຼື ພຣະວິນຍານບໍລິສຸດ. ໃນແນວຄິດຂອງພວກເຂົາ, ພວກເຂົາເຊື່ອວ່າ ພຣະບິດາພຽງອົງດຽວ ຫຼື ພຣະບຸດພຽງອົງດຽວ ບໍ່ສາມາດຖືວ່າເປັນພຣະເຈົ້າໄດ້. ມີພຽງແຕ່ພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດຮ່ວມກັນເທົ່ານັ້ນ ຈຶ່ງຖືວ່າເປັນພຣະເຈົ້າເອງ. ບັດນີ້ ຜູ້ເຊື່ອສາສະໜາທຸກຄົນ ແລະ ແມ່ນແຕ່ຜູ້ຕິດຕາມແຕ່ລະຄົນທີ່ຢູ່ທ່າມກາງພວກເຈົ້າ ແມ່ນມີຄວາມເຊື່ອແບບນີ້. ແຕ່ສຳລັບເລື່ອງທີ່ວ່າ ຄວາມເຊື່ອນີ້ຖືກຕ້ອງ ຫຼື ບໍ່ນັ້ນ, ບໍ່ມີໃຜສາມາດອະທິບາຍໄດ້ ຍ້ອນພວກເຈົ້າສັບສົນກ່ຽວກັບເລື່ອງຂອງພຣະເຈົ້າເອງຢູ່ສະເໝີ. ເຖິງແມ່ນສິ່ງເຫຼົ່ານີ້ຄືແນວຄິດ, ພວກເຈົ້າກໍບໍ່ຮູ້ວ່າ ສິ່ງເຫຼົ່ານີ້ຖືກ ຫຼື ຜິດ, ຍ້ອນວ່າພວກເຈົ້າຖືກກະທົບໂດຍແນວຄິດທາງສາສະໜາຢ່າງຮຸນແຮງເກີນໄປ. ພວກເຈົ້າໄດ້ຮັບເອົາແນວຄິດຕາມປະເພນີຂອງສາສະໜາຫຼາຍເກີນໄປ ແລະ ພິດນີ້ກໍໄດ້ຊຶມລົງເລິກເຂົ້າພາຍໃນຕົວພວກເຈົ້າ. ສະນັ້ນ, ໃນເລື່ອງນີ້ເຊັ່ນກັນ ພວກເຈົ້າແມ່ນໄດ້ຍອມຈຳນົນຕໍ່ອິດທິພົນທີ່ເປັນອັນຕະລາຍນີ້, ຍ້ອນພຣະເຈົ້າຕຣີເອການຸພາບບໍ່ມີຢູ່ຈິງແທ້ໆ. ນັ້ນກໍຄື ພຣະເຈົ້າຕຣີເອການຸພາບທີ່ມີພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດນັ້ນບໍ່ມີຢູ່ຈິງແທ້ໆ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນແນວຄິດຕາມປະເພນີຂອງມະນຸດ ແລະ ຄວາມເຊື່ອທີ່ບໍ່ຖືກຕ້ອງຂອງມະນຸດ. ຕະຫຼອດຫຼາຍສັດຕະວັດ, ມະນຸດໄດ້ເຊື່ອໃນພຣະເຈົ້າຕຣີເອການຸພາບນີ້, ເນລະມິດຂຶ້ນຈາກແນວຄິດທີ່ຢູ່ໃນຄວາມຄິດຂອງມະນຸດ, ປັ້ນແຕ່ງຂຶ້ນໂດຍມະນຸດ ແລະ ເປັນສິ່ງທີ່ມະນຸດບໍ່ເຄີຍເຫັນມາກ່ອນ. ຕະຫຼອດເວລາຫຼາຍປີທີ່ຜ່ານມາ, ມີຜູ້ອະທິບາຍພຣະຄຳພີຫຼາຍຄົນທີ່ໄດ້ອະທິບາຍ "ຄວາມໝາຍແທ້ຈິງ" ຂອງພຣະເຈົ້າຕຣີເອການຸພາບ, ແຕ່ການອະທິບາຍດັ່ງກ່າວກ່ຽວກັບພຣະເຈົ້າຕຣີເອການຸພາບວ່າມີຕົວຕົນສາມຢ່າງທີ່ແຕກຕ່າງກັນໃນຮ່າງກາຍດຽວແມ່ນບໍ່ແນ່ນອນ ແລະ ບໍ່ຊັດເຈນ ແລະ ຜູ້ຄົນລ້ວນແລ້ວແຕ່ສັບສົນກັບ "ໂຄງສ້າງ" ຂອງພຣະເຈົ້າ. ບໍ່ມີມະນຸດທີ່ຍິ່ງໃຫຍ່ຄົນໃດເຄີຍອະທິບາຍໄດ້ຢ່າງລະອຽດ; ການອະທິບາຍສ່ວນໃຫຍ່ແມ່ນພຽງຜ່ານມາດຕະຖານໃນເລື່ອງຂອງການໃຫ້ເຫດຜົນ ແລະ ບົດຄວາມ, ແຕ່ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ມີຄວາມເຂົ້າໃຈກ່ຽວກັບຄວາມໝາຍນີ້ໄດ້ຢ່າງຊັດເຈນສົມບູນ. ນີ້ກໍຍ້ອນວ່າ ພຣະເຈົ້າຕຣີເອການຸພາບທີ່ຍິ່ງໃຫຍ່ ຢູ່ໃນຫົວໃຈຂອງມະນຸດນັ້ນແມ່ນບໍ່ມີຈິງແທ້ໆ. ຍ້ອນວ່າ ບໍ່ມີໃຜເຄີຍເຫັນໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ຫຼື ໂຊກດີ

ພໍທີ່ຈະຂຶ້ນໄປຢ້ຽມຢາມບ່ອນຢູ່ອາໄສຂອງພຣະເຈົ້າເພື່ອກວດສອບສິ່ງທີ່ມີຢູ່ໃນບ່ອນທີ່ພຣະເຈົ້ານອນ, ເພື່ອສຳຫຼວດເບິ່ງວ່າມີຈັກສິບພັນຄົນ ຫຼື ມີຈັກຮ້ອຍລ້ານຮຸ່ນຄົນອາໄສຢູ່ "ເຮືອນຂອງພຣະເຈົ້າ" ຫຼື ສືບສວນວ່າ ມີເທົ່າໃດພາກສ່ວນທີ່ປະກອບເຂົ້າເປັນໂຄງສ້າງໂດຍທຳມະຊາດຂອງພຣະເຈົ້າ. ສິ່ງຫຼັກໆ ທີ່ຕ້ອງການກວດສອບຄືສິ່ງນີ້: ອາຍຸຂອງພຣະບິດາ ແລະ ພຣະບຸດ ພ້ອມທັງພຣະວິນຍານບໍລິສຸດ; ການປາກົດຕົວຂອງແຕ່ລະຕົວຕົນ; ທັງສາມພຣະອົງແຍກອອກຈາກກັນແນວໃດແທ້ໆ ແລະ ພຣະອົງທັງສາມຖືກເຮັດໃຫ້ກາຍເປັນໜຶ່ງໄດ້ແນວໃດ. ຊ່າງໂຊກບໍ່ດີແທ້ໆ, ໃນຕະຫຼອດຫຼາຍປີເຫຼົ່ານີ້, ບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ເຄີຍສາມາດກຳນົດຄວາມຈິງຂອງເລື່ອງເຫຼົ່ານີ້ໄດ້. ສິ່ງເຫຼົ່ານັ້ນລ້ວນແລ້ວແຕ່ເປັນການເດົາເທົ່ານັ້ນ ຍ້ອນບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ເຄີຍຂຶ້ນໄປຢ້ຽມຢາມສະຫວັນ ແລະ ກັບມາພ້ອມກັບ "ບົດລາຍງານສືບສວນ" ເພື່ອໃຫ້ມະນຸດຊາດທັງປວງໄດ້ລາຍງານເຖິງຄວາມຈິງກ່ຽວກັບບັນຫານີ້ຕໍ່ຜູ້ເຊື່ອສາສະໜາທຸກຄົນທີ່ຮ້ອນຮົນ ແລະ ມີສັດທາແຮງກ້າກ່ຽວກັບພຣະເຈົ້າຕຣີເອການຸພາບ. ແນ່ນອນ, ບໍ່ສາມາດກ່າວໂທດມະນຸດທີ່ມີແນວຄິດແບບນັ້ນ ຍ້ອນວ່າ ເປັນຫຍັງພຣະເຢໂຮວາພຣະບິດາຈຶ່ງບໍ່ໃຫ້ພຣະເຢຊູພຣະບຸດຢູ່ກັບພຣະອົງ ເມື່ອພຣະອົງສ້າງມະນຸດຊາດ? ໃນຕອນເລີ່ມຕົ້ນຖ້າທຸກສິ່ງດຳເນີນໄປດ້ວຍນາມຂອງພຣະເຢໂຮວາ, ມັນກໍຈະດີກວ່ານີ້. ຖ້າຕ້ອງກ່າວໂທດ, ໃຫ້ກ່າວໂທດໃສ່ການລະເລີຍຊົ່ວໄລຍະໜຶ່ງຂອງພຣະເຈົ້າເຢໂຮວາ ທີ່ພຣະອົງບໍ່ເອີ້ນພຣະບຸດ ແລະ ພຣະວິນຍານບໍລິສຸດໃຫ້ມາຢູ່ຕໍ່ໜ້າພຣະອົງໃນເວລາແຫ່ງການເນລະມິດສ້າງ, ແຕ່ກົງກັນຂ້າມ ພຣະອົງປະຕິບັດພາລະກິດຂອງພຣະອົງພຽງຜູ້ດຽວ. ຖ້າພຣະອົງທັງສາມລ້ວນແລ້ວແຕ່ປະຕິບັດພາລະກິດໃນເວລາດຽວກັນ, ແລ້ວພຣະອົງທັງສາມຈະບໍ່ກາຍເປັນໜຶ່ງບໍ? ຕັ້ງແຕ່ຕົ້ນຈົນຈົບ, ຖ້າມີພຽງແຕ່ນາມຂອງພຣະເຢໂຮວາ ແລະ ບໍ່ມີນາມຂອງພຣະເຢຊູຈາກຍຸກແຫ່ງພຣະຄຸນ ຫຼື ຖ້າພຣະອົງຍັງຖືກເອີ້ນວ່າພຣະເຢໂຮວາ, ແລ້ວພຣະເຈົ້າຈະບໍ່ໄດ້ຖືກຫຼີກເວັ້ນຈາກການທົນທຸກກັບການແບ່ງແຍກໂດຍມະນຸດຊາດບໍ? ເພື່ອໃຫ້ແນ່ໃຈ ພຣະເຢໂຮວາຈະບໍ່ຖືກກ່າວໂທດຍ້ອນສິ່ງນີ້ທັງໝົດ; ຖ້າຕ້ອງກ່າວໂທດ, ກໍຕ້ອງກ່າວໂທດໃສ່ພຣະວິນຍານບໍລິສຸດ ຜູ້ທີ່ສືບຕໍ່ພາລະກິດຂອງພຣະອົງເປັນເວລາຫຼາຍພັນປີດ້ວຍໃນນາມຂອງພຣະເຢໂຮວາ, ຂອງພຣະເຢຊູ ແລະ ແມ່ນແຕ່ຂອງພຣະວິນຍານບໍລິສຸດ, ເຮັດໃຫ້ມະນຸດມຶນງົງ ແລະ ສັບສົນ ຈົນມະນຸດບໍ່ຮູ້ຈັກວ່າແມ່ນໃຜຄືພຣະເຈົ້າກັນແທ້. ຖ້າພຣະວິນຍານບໍລິສຸດປະຕິບັດພາລະກິດດ້ວຍພຣະອົງເອງໂດຍປາສະຈາກຮູບຮ່າງ ຫຼື ລັກສະນະ ແລະ ຍິ່ງໄປກວ່ານັ້ນ ໂດຍປາສະຈາກຊື່ ເຊັ່ນ: ພຣະເຢຊູ ແລະ ມະນຸດບໍ່ສາມາດສຳຜັດໄດ້ ຫຼື ເຫັນພຣະອົງ, ພຽງແຕ່ໄດ້ຍິນສຽງຟ້າຮ້ອງ, ແລ້ວພາລະກິດປະເພດນີ້ຈະບໍ່ເປັນປະໂຫຍດຕໍ່ມະນຸດຊາດຫຼາຍກວ່າບໍ? ແລ້ວຈະສາມາດເຮັດຫຍັງໄດ້ແດ່ໃນຕອນນີ້? ແນວຄິດຂອງມະນຸດໄດ້ສະສົມສູງສໍ່າພູເຂົາ ແລະ ກວ້າງສໍ່າທະເລ, ຈົນເຖິງຂັ້ນທີ່ວ່າພຣະເຈົ້າແຫ່ງປັດຈຸບັນບໍ່ອົດທົນຕໍ່ແນວຄິດເຫຼົ່ານັ້ນອີກຕໍ່ໄປ ແລະ ເຮັດຫຍັງບໍ່ຖືກເລີຍ. ໃນອະດີດເມື່ອມີພຣະເຢໂຮວາ, ພຣະເຢຊູ ແລະ ມີພຣະວິນຍານບໍລິສຸດທີ່ຢູ່ໃນທ່າມກາງຂອງສອງພຣະອົງ, ມະນຸດແມ່ນເຮັດຫຍັງບໍ່ຖືກກ່ຽວກັບວິທີຮັບມື ແລະ ປັດຈຸບັນ ພັດມີອົງຊົງລິດທານຸພາບສູງສຸດເພີ່ມອີກ ຜູ້ທີ່ເວົ້າໄດ້ວ່າເປັນສ່ວນໜຶ່ງຂອງພຣະເຈົ້າອີກຄົນ. ແມ່ນໃຜແດ່ທີ່ຮູ້ຈັກວ່າພຣະອົງແມ່ນໃຜ ແລະ

ພຣະອົງເປັນລັກປະປົນໄປກັບຕົວຕົນໃດຂອງພຣະເຈົ້າຕຣີເອການຸພາບ ຫຼື ລີ້ຢູ່ພາຍໃນເປັນເວລາຈັກປີ? ມະນຸດຈະສາມາດແບກຮັບສິ່ງນີ້ໄດ້ແນວໃດ? ພຣະເຈົ້າຕຣີເອການຸພາບຢ່າງດຽວແມ່ນພຽງພໍທີ່ຈະເຮັດໃຫ້ມະນຸດໃຊ້ທັງຊີວິດເພື່ອອະທິບາຍ, ແຕ່ປັດຈຸບັນນີ້ ມີ "ພຣະເຈົ້າໜຶ່ງອົງໃນສີ່ຕົວຕົນ". ແລ້ວຈະອະທິບາຍສິ່ງນີ້ໄດ້ແນວໃດ? ເຈົ້າສາມາດອະທິບາຍສິ່ງນີ້ບໍ? ອ້າຍເອື້ອຍນ້ອງເອີຍ! ພວກເຈົ້າເຊື່ອໃນພຣະເຈົ້າປະເພດດັ່ງກ່າວຈົນເຖິງປັດຈຸບັນໄດ້ແນວໃດ? ເຮົາຊື່ນຊົມພວກເຈົ້າຫຼາຍ. ພຣະເຈົ້າຕຣີເອການຸພາບກໍພໍທີ່ຈະຮັບໄດ້; ພວກເຈົ້າຈະສາມາດສືບຕໍ່ມີຄວາມເຊື່ອຢ່າງໝັ້ນຄົງໃນພຣະເຈົ້າໜຶ່ງອົງໃນສີ່ຕົວຕົນໄດ້ແນວໃດ? ພວກເຈົ້າຖືກຜັກດັນໃຫ້ອອກໄປ, ແຕ່ພວກເຈົ້າປະຕິເສດ. ຊ່າງເຫຼືອເຊື່ອ! ພວກເຈົ້າຈັ່ງແມ່ນຄັກຫຼາຍ! ບຸກຄົນໜຶ່ງເຖິງກັບເຊື່ອໃນພຣະເຈົ້າສີ່ອົງ ແລະ ບໍ່ເຂົ້າໃຈໃນສິ່ງນັ້ນເລີຍ; ພວກເຈົ້າບໍ່ຄິດບໍວ່າ ນີ້ຄືສິ່ງອັດສະຈັນ? ເມື່ອຫຼຽວເບິ່ງເຈົ້າ, ບໍ່ມີຜູ້ໃດຈະຮູ້ວ່າພວກເຈົ້າສາມາດເຮັດການອັດສະຈັນທີ່ຍິ່ງໃຫຍ່ແບບນັ້ນໄດ້! ຕາມຄວາມຈິງແລ້ວ ເຮົາຂໍບອກພວກເຈົ້າວ່າພຣະເຈົ້າຕຣີເອການຸພາບບໍ່ມີຢູ່ຈິງບໍ່ວ່າຢູ່ບ່ອນໃດກໍຕາມໃນຈັກກະວານນີ້. ພຣະເຈົ້າບໍ່ມີພຣະບິດາ ແລະ ບໍ່ມີພຣະບຸດ, ແຮງໄກທີ່ຈະມີແນວຄິດທີ່ພຣະບິດາ ແລະ ພຣະບຸດຮ່ວມກັນໃຊ້ພຣະວິນຍານບໍລິສຸດເປັນເຄື່ອງມື. ທຸກສິ່ງເຫຼົ່ານີ້ແມ່ນຄວາມເຊື່ອທີ່ຜິດທີ່ສຸດໃນໂລກນີ້ ແລະ ພຽງແຕ່ບໍ່ມີຢູ່ຈິງ! ເຖິງຢ່າງໃດກໍຕາມ ຄວາມເຊື່ອທີ່ຜິດແມ່ນມີຕົ້ນກຳເນີດຂອງມັນ ແລະ ບໍ່ແມ່ນວ່າບໍ່ມີພື້ນຖານຫຍັງທັງໝົດ, ຍ້ອນວ່າ ຄວາມຄິດຂອງພວກເຈົ້າບໍ່ທຳມະດາ ແລະ ຄວາມຄິດຂອງພວກເຈົ້າບໍ່ໄດ້ປາສະຈາກເຫດຜົນ. ກົງກັນຂ້າມ, ພວກມັນຂ້ອນຂ້າງເໝາະສົມ ແລະ ສະຫຼາດພໍສົມຄວນ ຈົນພວກມັນສາມາດຕໍ່ຕ້ານແມ່ນແຕ່ກັບຊາຕານ. ໜ້າເວດທະນາກໍຄື ຄວາມຄິດເຫຼົ່ານີ້ແມ່ນຄວາມຄິດຜິດທັງໝົດ ແລະ ບໍ່ມີຢູ່ຈິງແທ້ໆ! ພວກເຈົ້າບໍ່ໄດ້ເຫັນຄວາມຈິງທີ່ແທ້ຈິງເລີຍ; ພວກເຈົ້າພຽງແຕ່ສ້າງການຄາດເດົາ ແລະ ຈິນຕະນາການຂຶ້ນ, ແລ້ວກໍປັ້ນແຕ່ງມັນໃຫ້ເປັນເລື່ອງລາວເພື່ອຫຼອກລວງເອົາຄວາມໄວ້ວາງໃຈຂອງຄົນອື່ນ ແລະ ເພື່ອມີອຳນາດເໜືອມະນຸດທີ່ໂງ່ຈ້າ ທີ່ສຸດ ທີ່ຂາດສະຕິປັນຍາ ຫຼື ເຫດຜົນ, ເພື່ອວ່າພວກເຂົາຈະເຊື່ອໃນ "ຄຳສັ່ງສອນອັນຊ່ຽວຊານ" ທີ່ຍິ່ງໃຫຍ່ ແລະ ມີຊື່ສຽງຂອງພວກເຈົ້າ. ນີ້ແມ່ນຄວາມຈິງບໍ? ນີ້ແມ່ນຫົນທາງແຫ່ງຊີວິດທີ່ມະນຸດຄວນໄດ້ຮັບບໍ? ມັນໄຮ້ສາລະທັງໝົດ! ບໍ່ມີແມ່ນແຕ່ຄຳເວົ້າດຽວທີ່ເໝາະສົມ! ຕະຫຼອດຫຼາຍປີທີ່ຜ່ານມາ, ພຣະເຈົ້າຖືກພວກເຈົ້າແຍກອອກໃນລັກສະນະນີ້, ຖືກແຍກອອກໃຫ້ໄກອອກໄປເລື້ອຍໆໃນແຕ່ລະຮຸ່ນຄົນ, ຈົນເຖິງຂັ້ນທີ່ວ່າພຣະເຈົ້າອົງດຽວຖືກແບ່ງອອກເປັນພຣະເຈົ້າສາມອົງຢ່າງເປີດເຜີຍ. ແລ້ວບັດນີ້ ມັນກໍເປັນໄປບໍ່ໄດ້ສຳລັບມະນຸດທີ່ຈະລວມພຣະເຈົ້າໃຫ້ເຂົ້າເປັນໜຶ່ງດຽວ, ຍ້ອນພວກເຈົ້າໄດ້ແຍກພຣະອົງອອກດົກເກີນໄປ! ຖ້າບໍ່ແມ່ນເພື່ອພາລະກິດອັນຮີບດ່ວນຂອງເຮົາ ກ່ອນທີ່ມັນຈະຊ້າເກີນໄປ, ມັນຍາກທີ່ຈະເວົ້າໄດ້ວ່າ ອີກດົນປານໃດພວກເຈົ້າຈະສືບຕໍ່ປະຕິບັດແບບນີ້ຢ່າງບໍ່ມີຢາງອາຍ! ຖ້າຈະສືບຕໍ່ແຍກພຣະເຈົ້າອອກໃນລັກສະນະນີ້, ພຣະອົງຈະຍັງເປັນພຣະເຈົ້າຂອງພວກເຈົ້າຢູ່ບໍ? ພວກເຈົ້າຍັງຈະຮັບຮູ້ພຣະເຈົ້າຢູ່ບໍ? ພວກເຈົ້າຍັງຈະພົບເຫັນຕົ້ນກຳເນີດຂອງພຣະອົງຢູ່ບໍ? ຖ້າເຮົາມາເຖິງຊ້າກວ່ານີ້, ມັນເປັນໄປໄດ້ທີ່ພວກເຈົ້າຈະສົ່ງ "ພຣະບິດາ ແລະ ພຣະບຸດ", ພຣະເຢໂຮວາ ແລະ ພຣະເຢຊູກັບຄືນສູ່ອິດສະຣາເອນ ແລະ ອ້າງວ່າ

ພວກເຈົ້າເອງເປັນສ່ວນໜຶ່ງຂອງພຣະເຈົ້າ. ຍັງໂຊກດີ, ປັດຈຸບັນນີ້ ຄືຍຸກສຸດທ້າຍ. ໃນທີ່ສຸດ, ມື້ທີ່ເຮົາໄດ້ລໍຖ້າມາດົນກໍມາເຖິງແລ້ວ ແລະ ພຽງແຕ່ຫຼັງຈາກທີ່ເຮົາປະຕິບັດພາລະກິດຂັ້ນຕອນນີ້ດ້ວຍມືຂອງເຮົາເອງ ການທີ່ພວກເຈົ້າແຍກພຣະເຈົ້າເອງອອກກໍຈະຢຸດ. ຖ້າບໍ່ແມ່ນຍ້ອນສິ່ງນີ້, ພວກເຈົ້າກໍຈະຮ້າຍແຮງຂຶ້ນ ເຖິງກັບຍົກຊາຕານທຸກຕົນຢູ່ທ່າມກາງພວກເຈົ້າຂຶ້ນເທິງໂຕະເພື່ອນະມັດສະການ. ນີ້ແມ່ນອຸບາຍຂອງພວກເຈົ້າ! ນີ້ແມ່ນວິທີການທີ່ພວກເຈົ້າແຍກພຣະເຈົ້າ! ພວກເຈົ້າຈະສືບຕໍ່ເຮັດແບບນັ້ນຢູ່ບໍໃນຕອນນີ້? ໃຫ້ເຮົາຖາມພວກເຈົ້າວ່າ: ມີພຣະເຈົ້າຈັກອົງ? ພຣະເຈົ້າອົງໃດທີ່ຈະນຳຄວາມລອດພົ້ນມາສູ່ພວກເຈົ້າ? ເປັນພຣະເຈົ້າອົງທຳອິດ, ອົງທີສອງ ຫຼື ອົງທີສາມທີ່ພວກເຈົ້າອະທິຖານຫາຢູ່ສະເໝີ? ພວກເຈົ້າເຊື່ອໃນພຣະເຈົ້າອົງໃດຢູ່ຕະຫຼອດເວລາ? ເປັນພຣະບິດາບໍ? ຫຼື ພຣະບຸດ? ຫຼື ເປັນພຣະວິນຍານບໍລິສຸດ? ໃຫ້ບອກເຮົາແດ່ວ່າແມ່ນໃຜທີ່ເຈົ້າເຊື່ອ. ເຖິງແມ່ນດ້ວຍເຈົ້າເວົ້າທຸກຄຳວ່າເຈົ້າເຊື່ອໃນພຣະເຈົ້າ, ສິ່ງທີ່ພວກເຈົ້າເຊື່ອແທ້ໆແມ່ນສະໝອງຂອງພວກເຈົ້າເອງ! ພວກເຈົ້າແມ່ນບໍ່ມີພຣະເຈົ້າຢູ່ໃນຫົວໃຈຂອງພວກເຈົ້າແທ້ໆ! ແຕ່ ໃນຄວາມຄິດຂອງພວກເຈົ້າແມ່ນມີ ພຣະເຈົ້າຕຣີເອການຸພາບ ຢູ່ຢ່າງຫຼວງຫຼາຍ! ພວກເຈົ້າບໍ່ເຫັນດີນຳບໍ?

ຖ້າສາມຂັ້ນຕອນຂອງພາລະກິດຖືກປະເມີນຕາມແນວຄິດນີ້ທີ່ວ່າ ມີພຣະເຈົ້າຕຣີເອການຸພາບ, ດັ່ງນັ້ນ ກໍຕ້ອງມີພຣະເຈົ້າສາມພຣະອົງ ເພາະວ່າ ພາລະກິດທີ່ແຕ່ລະພຣະອົງປະຕິບັດແມ່ນບໍ່ຄືກັນ. ຖ້າມີຜູ້ໃດກໍຕາມໃນທ່າມກາງພວກເຈົ້າເວົ້າວ່າ ພຣະເຈົ້າສາມພຣະພາກມີແທ້ຈິງຢ່າງແນ່ນອນ, ແລ້ວໃຫ້ອະທິບາຍວ່າ ພຣະເຈົ້າໜຶ່ງດຽວທີ່ຢູ່ໃນສາມຕົວຕົນນີ້ແມ່ນຫຍັງແທ້ໆ. ແມ່ນຫຍັງຄືພຣະບິດາບໍລິສຸດ? ພຣະບຸດແມ່ນຫຍັງ? ພຣະວິນຍານບໍລິສຸດແມ່ນຫຍັງ? ພຣະເຢໂຮວາແມ່ນພຣະບິດາບໍລິສຸດບໍ? ພຣະເຢຊູແມ່ນພຣະບຸດບໍ? ແລ້ວພຣະວິນຍານບໍລິສຸດເດ? ພຣະບິດາບໍ່ແມ່ນພຣະວິນຍານບໍ? ແກ່ນແທ້ຂອງພຣະບຸດບໍ່ແມ່ນພຣະວິນຍານເຊັ່ນກັນບໍ? ພາລະກິດຂອງພຣະເຢຊູບໍ່ແມ່ນພາລະກິດຂອງພຣະວິນຍານບໍລິສຸດບໍ? ພາລະກິດຂອງພຣະເຢໂຮວາໃນເວລານັ້ນ ບໍ່ໄດ້ຖືກປະຕິບັດໂດຍພຣະວິນຍານຄືກັນກັບພຣະເຢຊູບໍ? ພຣະເຈົ້າສາມາດມີພຣະວິນຍານໄດ້ຈັກອົງ? ອີງຕາມຄຳອະທິບາຍຂອງເຈົ້າ, ສາມຕົວຕົນທີ່ມີພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດແມ່ນອັນໜຶ່ງອັນດຽວກັນ; ຖ້າເປັນແບບນີ້ ແລ້ວກໍມີພຣະວິນຍານສາມອົງ, ແຕ່ການມີພຣະວິນຍານສາມອົງແມ່ນໝາຍຄວາມວ່າມີພຣະເຈົ້າສາມອົງ. ສິ່ງນີ້ໝາຍຄວາມວ່າບໍ່ມີພຣະເຈົ້າທີ່ແທ້ຈິງໜຶ່ງດຽວ; ພຣະເຈົ້າປະເພດນີ້ຈະຍັງສາມາດມີແກ່ນແທ້ໂດຍທຳມະຊາດຂອງພຣະເຈົ້າໄດ້ແນວໃດ? ຖ້າເຈົ້າຍອມຮັບວ່າ ມີແຕ່ພຣະເຈົ້າພຽງໜຶ່ງດຽວ, ແລ້ວພຣະອົງຈະສາມາດມີລູກຊາຍ ແລະ ເປັນບິດາໄດ້ແນວໃດ? ສິ່ງເຫຼົ່ານີ້ບໍ່ແມ່ນລ້ວນແລ້ວແຕ່ເປັນແນວຄິດຂອງເຈົ້າບໍ? ມີພຣະເຈົ້າພຽງໜຶ່ງດຽວ, ມີພຽງຕົວຕົນໜຶ່ງດຽວໃນພຣະເຈົ້າອົງນີ້ ແລະ ມີພຽງພຣະວິນຍານອົງດຽວຂອງພຣະເຈົ້າເທົ່ານັ້ນ ດັ່ງທີ່ໄດ້ຂຽນລົງໃນພຣະຄຳພີວ່າ "ມີພຣະວິນຍານບໍລິສຸດພຽງໜຶ່ງດຽວ ແລະ ມີພຣະເຈົ້າພຽງໜຶ່ງດຽວ". ບໍ່ວ່າພຣະບິດາ ແລະ ພຣະບຸດທີ່ເຈົ້າກ່າວເຖິງນັ້ນມີຢູ່ຈິງ ຫຼື ບໍ່, ໃນທີ່ສຸດແລ້ວກໍມີພຽງແຕ່ພຣະເຈົ້າໜຶ່ງດຽວ ແລະ ແກ່ນແທ້ແທ້ຂອງພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດທີ່ພວກເຈົ້າເຊື່ອກໍ່ເປັນແກ່ນແທ້ຂອງພຣະວິນຍານ

ບໍລິສຸດ. ເວົ້າອີກຢ່າງໜຶ່ງກໍຄື ພຣະເຈົ້າເປັນພຣະວິນຍານ, ແຕ່ພຣະອົງສາມາດກາຍເປັນເນື້ອໜັງ ແລະ ດຳລົງຊີວິດທ່າມກາງມະນຸດ ພ້ອມທັງຢູ່ເໜືອສິ່ງທັງປວງ. ພຣະວິນຍານຂອງພຣະອົງປົກຄຸມທຸກສິ່ງ ແລະ ຢູ່ທຸກຫົນທຸກແຫ່ງ. ພຣະອົງສາມາດຢູ່ໃນເນື້ອໜັງ ແລະ ຢູ່ທົ່ວທັງຈັກກະວານໃນເວລາດຽວກັນ. ໃນເມື່ອທຸກຄົນເວົ້າວ່າ ພຣະເຈົ້າເປັນພຣະເຈົ້າໜຶ່ງດຽວທີ່ແທ້ຈິງ, ດັ່ງນັ້ນກໍຈະມີພຽງພຣະເຈົ້າໜຶ່ງດຽວ ເຊິ່ງບໍ່ມີໃຜສາມາດແບ່ງແຍກອອກໄດ້ຕາມອຳເພີໃຈ! ພຣະເຈົ້າເປັນພຣະວິນຍານໜຶ່ງດຽວເທົ່ານັ້ນ ແລະ ມີອົງດຽວເທົ່ານັ້ນ; ແລະ ນັ້ນກໍແມ່ນພຣະວິນຍານຂອງພຣະເຈົ້າ. ຖ້າເປັນຄືດັ່ງເຈົ້າເວົ້າວ່າ ມີ ພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ, ແລ້ວພວກອົງທັງສາມບໍ່ແມ່ນພຣະເຈົ້າສາມອົງບໍ? ພຣະວິນຍານບໍລິສຸດເປັນເລື່ອງໜຶ່ງ, ພຣະບຸດອີກເລື່ອງໜຶ່ງ ແລະ ພຣະບິດາກໍເປັນອີກເລື່ອງໜຶ່ງ. ຕົວຕົນຂອງທັງສາມພຣະອົງແມ່ນແຕກຕ່າງກັນ ແລະ ແກ່ນແທ້ຂອງພຣະອົງທັງສາມກໍ່ແຕກຕ່າງກັນ. ແລ້ວທັງສາມພຣະອົງຈະເປັນສ່ວນໜຶ່ງຂອງພຣະເຈົ້າໜຶ່ງດຽວໄດ້ແນວໃດ? ພຣະວິນຍານບໍລິສຸດເປັນ ພຣະວິນຍານ; ສິ່ງນີ້ງ່າຍສຳລັບມະນຸດທີ່ຈະເຂົ້າໃຈ. ຖ້າເປັນແບບນີ້, ແລ້ວພຣະບິດາກໍຍິ່ງເປັນ ພຣະວິນຍານຫຼາຍກວ່າ. ພຣະອົງບໍ່ເຄີຍລົງມາເທິງແຜ່ນດິນໂລກ ແລະ ບໍ່ເຄີຍກາຍເປັນເນື້ອໜັງຈັກ ເທື່ອ; ພຣະອົງເປັນພຣະເຈົ້າເຢໂຮວາທີ່ຢູ່ໃນຫົວໃຈຂອງມະນຸດ ແລະ ພຣະອົງເປັນພຣະວິນຍານເຊັ່ນກັນ ຢ່າງແນ່ນອນ. ແລ້ວແມ່ນຫຍັງຄືຄວາມສຳພັນລະຫວ່າງພຣະອົງ ແລະ ພຣະວິນຍານບໍລິສຸດ? ມັນ ແມ່ນຄວາມສຳພັນລະຫວ່າງພຣະບິດາ ແລະ ພຣະບຸດບໍ? ຫຼື ມັນບໍ່ແມ່ນຄວາມສຳພັນລະຫວ່າງ ພຣະວິນຍານບໍລິສຸດ ແລະ ພຣະວິນຍານຂອງພຣະບິດາບໍ? ແກ່ນແທ້ຂອງພຣະວິນຍານແຕ່ລະອົງຄືກັນ ບໍ? ຫຼື ພຣະວິນຍານບໍລິສຸດແມ່ນເຄື່ອງມືຂອງພຣະບິດາບໍ? ຈະສາມາດອະທິບາຍສິ່ງນີ້ໄດ້ແນວໃດ? ແລ້ວແມ່ນຫຍັງຄືຄວາມສຳພັນລະຫວ່າງພຣະບຸດ ແລະ ພຣະວິນຍານບໍລິສຸດ? ມັນເປັນຄວາມສຳພັນ ລະຫວ່າງພຣະວິນຍານສອງອົງບໍ ຫຼື ຄວາມສຳພັນລະຫວ່າງມະນຸດ ແລະ ພຣະວິນຍານ? ສິ່ງເຫຼົ່ານີ້ ລ້ວນແລ້ວແຕ່ເປັນເລື່ອງທີ່ບໍ່ມີຄຳອະທິບາຍ! ຖ້າທັງສາມພຣະອົງລ້ວນແລ້ວແຕ່ເປັນພຣະວິນຍານໜຶ່ງ ດຽວ, ແລ້ວຈະບໍ່ມີການເວົ້າເຖິງສາມຕົວຕົນ, ຍ້ອນທັງສາມພຣະອົງມີພຣະວິນຍານໜຶ່ງດຽວ. ຖ້າທັງ ສາມພຣະອົງມີຕົວຕົນທີ່ແຕກຕ່າງກັນ, ແລ້ວພຣະວິນຍານຂອງທັງສາມພຣະອົງກໍຈະມີກຳລັງທີ່ຫຼາກ ຫຼາຍ ແລະ ທັງສາມພຣະອົງແມ່ນຈະບໍ່ສາມາດເປັນພຣະວິນຍານໜຶ່ງດຽວໄດ້. ແນວຄິດທີ່ວ່າ ມີ ພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດແມ່ນບໍ່ສົມເຫດສົມຜົນທີ່ສຸດ! ສິ່ງນີ້ເປັນການແບ່ງ ພຣະເຈົ້າ ແລະ ແຍກພຣະອົງອອກເປັນສາມຕົວຕົນ ເຊິ່ງແຕ່ລະຕົວຕົນກໍມີສະຖານະ ແລະ ພຣະວິນຍານ; ແລ້ວພຣະອົງຈະຍັງສາມາດເປັນພຣະວິນຍານໜຶ່ງດຽວ ແລະ ພຣະເຈົ້າໜຶ່ງດຽວໄດ້ແນວໃດ? ໃຫ້ບອກ ເຮົາເບິ່ງ, ສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທີ່ແມ່ນຖືກສ້າງໂດຍພຣະບິດາ, ພຣະບຸດ ຫຼື ພຣະວິນຍານບໍລິສຸດແທ້ໆບໍ? ບາງຄົນເວົ້າວ່າທັງສາມພຣະອົງສ້າງທຸກສິ່ງນຳກັນ. ແລ້ວແມ່ນໃຜໄຖ່ ບາບມະນຸດຊາດ? ພຣະວິນຍານບໍລິສຸດ, ພຣະບຸດ ຫຼື ພຣະບິດາ? ບາງຄົນເວົ້າວ່າ ພຣະບຸດຄືຜູ້ໄຖ່ບາບ ມະນຸດຊາດ. ແລ້ວແມ່ນໃຜເປັນພຣະບຸດທີ່ຢູ່ໃນແກ່ນແທ້? ພຣະອົງບໍ່ແມ່ນການບັງເກີດເປັນມະນຸດ ຂອງພຣະວິນຍານຂອງພຣະເຈົ້າບໍ? ການບັງເກີດເປັນມະນຸດເອີ້ນພຣະເຈົ້າທີ່ຢູ່ໃນສະຫວັນ ໂດຍນາມ

ຂອງພຣະບິດາຈາກທັດສະນະຂອງມະນຸດທີ່ຖືກສ້າງ. ເຈົ້າບໍ່ຮູ້ບໍວ່າ ພຣະເຢຊູເກີດຈາກການປະຕິສົນທິຂອງພຣະວິນຍານບໍລິສຸດ? ພາຍໃນພຣະອົງແມ່ນພຣະວິນຍານບໍລິສຸດ; ບໍ່ວ່າເຈົ້າຈະເວົ້າຫຍັງກໍຕາມ, ພຣະອົງກໍຍັງເປັນຜູ້ດຽວກັບພຣະເຈົ້າທີ່ຢູ່ໃນສະຫວັນ, ຍ້ອນວ່າ ພຣະອົງເປັນການບັງເກີດເປັນມະນຸດຂອງພຣະວິນຍານຂອງພຣະເຈົ້າ. ແນວຄິດນີ້ກ່ຽວກັບພຣະບຸດແມ່ນບໍ່ເປັນຈິງແທ້ໆ. ມີພຣະວິນຍານໜຶ່ງດຽວທີ່ປະຕິບັດພາລະກິດທຸກຢ່າງ; ມີພຽງພຣະເຈົ້າເອງ ນັ້ນກໍຄື ພຣະວິນຍານຂອງພຣະເຈົ້າທີ່ປະຕິບັດພາລະກິດຂອງພຣະອົງ. ແມ່ນໃຜຄືພຣະວິນຍານຂອງພຣະເຈົ້າ? ມັນບໍ່ແມ່ນພຣະວິນຍານບໍລິສຸດບໍ? ບໍ່ແມ່ນພຣະວິນຍານບໍລິສຸດບໍ ທີ່ປະຕິບັດພາລະກິດໃນພຣະເຢຊູ? ຖ້າພາລະກິດບໍ່ໄດ້ຖືກປະຕິບັດໂດຍພຣະວິນຍານບໍລິສຸດ (ນັ້ນກໍຄື ພຣະວິນຍານຂອງພຣະເຈົ້າ), ແລ້ວພາລະກິດຂອງພຣະອົງຈະສາມາດເປັນຕົວແທນໃຫ້ກັບພຣະເຈົ້າເອງໄດ້ບໍ? ເມື່ອພຣະເຢຊູເອີ້ນຫາພຣະເຈົ້າທີ່ຢູ່ໃນສະຫວັນດ້ວຍນາມຂອງພຣະບິດາເມື່ອພຣະອົງອະທິຖານ, ສິ່ງນີ້ແມ່ນເກີດຂຶ້ນໃນທັດສະນະຂອງມະນຸດທີ່ຖືກສ້າງເທົ່ານັ້ນ, ນີ້ກໍຍ້ອນວ່າ ພຣະວິນຍານຂອງພຣະເຈົ້າໄດ້ສວມໃສ່ເນື້ອໜັງທີ່ສາມັນ ແລະ ທຳມະດາ ແລະ ມີສິ່ງປົກຫຸ້ມພາຍນອກຄືກັບສິ່ງທີ່ຖືກສ້າງ. ເຖິງແມ່ນວ່າພາຍໃນພຣະອົງເປັນພຣະວິນຍານຂອງພຣະເຈົ້າ, ລັກສະນະພາຍນອກຂອງພຣະອົງກໍຍັງເປັນມະນຸດທຳມະດາ; ເວົ້າອີກຢ່າງໜຶ່ງກໍຄື ພຣະອົງໄດ້ກາຍມາເປັນ "ບຸດມະນຸດ" ທີ່ມະນຸດທັງປວງ ລວມເຖິງພຣະເຢຊູເອງ ໄດ້ເວົ້າໄວ້. ເນື່ອງຈາກວ່າພຣະອົງຖືກເອີ້ນວ່າບຸດມະນຸດ, ພຣະອົງກໍເປັນມະນຸດ (ບໍ່ວ່າຜູ້ຊາຍ ຫຼື ແມ່ຍິງ, ໃນກໍລະນີໃດກໍຕາມແມ່ນເປັນບຸກຄົນມີເປືອກນອກຂອງມະນຸດ) ທີ່ເກີດໃນຄອບຄົວທຳມະດາຂອງຜູ້ຄົນສາມັນ. ສະນັ້ນ ພຣະເຢຊູທີ່ເອີ້ນຫາພຣະເຈົ້າຢູ່ໃນສະຫວັນ ໂດຍນາມຂອງພຣະບິດານັ້ນ ກໍຄືກັນກັບທີ່ພວກເຈົ້າເອີ້ນພຣະອົງວ່າພຣະບິດາໃນຕອນທຳອິດ; ພຣະອົງເຮັດແບບນັ້ນແມ່ນຈາກທັດສະນະຂອງມະນຸດທີ່ຖືກສ້າງ. ພວກເຈົ້າຍັງຈື່ຄຳອະທິຖານຂອງພຣະຜູ້ເປັນເຈົ້າທີ່ພຣະເຢຊູສອນພວກເຈົ້າໃຫ້ທ່ອງຈຳບໍ? "ພຣະບິດາຂອງພວກຂ້ານ້ອຍ ຜູ້ທີ່ຢູ່ໃນສະຫວັນ...". ພຣະອົງຂໍໃຫ້ມະນຸດທຸກຄົນເອີ້ນພຣະເຈົ້າທີ່ຢູ່ໃນສະຫວັນດ້ວຍນາມຂອງພຣະບິດາ. ແລ້ວໃນເມື່ອພຣະເຢຊູກໍເອີ້ນພຣະອົງວ່າພຣະບິດາເຊັ່ນກັນ, ພຣະອົງເອີ້ນຈາກທັດສະນະຂອງຄົນໜຶ່ງທີ່ມີຖານະເທົ່າທຽມກັບພວກເຈົ້າ. ແລ້ວຍ້ອນພວກເຈົ້າເອີ້ນຫາພຣະເຈົ້າທີ່ຢູ່ໃນສະຫວັນດ້ວຍນາມພຣະບິດາ, ພຣະເຢຊູກໍ່ເຫັນພຣະອົງເອງມີຖານະເທົ່າກັບພວກເຈົ້າ ແລະ ໃນຖານະມະນຸດເທິງແຜ່ນດິນໂລກທີ່ພຣະເຈົ້າໄດ້ເລືອກໄວ້ (ນັ້ນກໍຄື ພຣະບຸດຂອງພຣະເຈົ້າ). ຖ້າພວກເຈົ້າເອີ້ນພຣະເຈົ້າວ່າ ພຣະບິດາ, ນີ້ບໍ່ແມ່ນຍ້ອນວ່າ ພວກເຈົ້າເປັນສິ່ງຖືກສ້າງບໍ? ບໍ່ວ່າສິດອຳນາດຂອງພຣະເຢຊູຢູ່ເທິງແຜ່ນດິນໂລກນັ້ນຈະຍິ່ງໃຫຍ່ພຽງໃດກໍຕາມ, ກ່ອນທີ່ຈະຖືກຄຶງໄວ້ເທິງໄມ້ກາງແຂນ, ພຣະອົງກໍເປັນພຽງບຸດມະນຸດຄົນໜຶ່ງເທົ່ານັ້ນ ເຊິ່ງປົກຄອງໂດຍພຣະວິນຍານບໍລິສຸດ (ນັ້ນກໍຄື ພຣະເຈົ້າ) ແລະ ເປັນໜຶ່ງໃນສິ່ງທີ່ຖືກສ້າງຂຶ້ນໃນແຜ່ນດິນໂລກ, ຍ້ອນວ່າ ພຣະອົງຍັງບໍ່ໄດ້ເຮັດສຳເລັດພາລະກິດຂອງພຣະອົງເທື່ອ. ສະນັ້ນ, ການທີ່ພຣະອົງເອີ້ນພຣະເຈົ້າທີ່ຢູ່ໃນສະຫວັນວ່າ ພຣະບິດາ ກໍເປັນຄວາມຖ່ອມຕົນ ແລະ ຄວາມເຊື່ອຟັງຂອງພຣະອົງເທົ່ານັ້ນ. ການທີ່ພຣະອົງເອີ້ນພຣະເຈົ້າ (ນັ້ນກໍຄື ພຣະວິນຍານທີ່ຢູ່ໃນສະຫວັນ) ໃນລັກສະນະນັ້ນ ແມ່ນບໍ່ໄດ້ພິສູດວ່າ ພຣະອົງເປັນພຣະບຸດຂອງ

ພຣະວິນຍານຂອງພຣະເຈົ້າທີ່ຢູ່ໃນສະຫວັນ. ກົງກັນຂ້າມ, ມັນເປັນພຽງແຕ່ຍ້ອນທັດສະນະຂອງພຣະອົງແຕກຕ່າງກັນ, ບໍ່ແມ່ນວ່າພຣະອົງມີຕົວຕົນທີ່ແຕກຕ່າງກັນ. ການມີຢູ່ຂອງຕົວຕົນທີ່ແຕກຕ່າງກັນແມ່ນຄວາມເຊື່ອທີ່ຜິດ! ກ່ອນທີ່ພຣະອົງຈະຖືກຄຶງໄວ້ເທິງໄມ້ກາງແຂນ, ພຣະເຢຊູເປັນບຸດມະນຸດທີ່ຖືກຜູກມັດດ້ວຍຂໍ້ຈຳກັດຕ່າງໆຂອງເນື້ອໜັງ ແລະ ພຣະອົງບໍ່ໄດ້ມີສິດອຳນາດຂອງພຣະວິນຍານຢ່າງສົມບູນ. ນັ້ນຄືເຫດຜົນທີ່ວ່າ ເປັນຫຍັງພຣະອົງຈຶ່ງສາມາດສະແຫວງຫາຄວາມປະສົງຂອງພຣະເຈົ້າພຣະບິດາຈາກທັດສະນະຂອງສິ່ງຖືກສ້າງ. ມັນເປັນດັ່ງທີ່ພຣະອົງອະທິຖານສາມຄັ້ງໃນສວນເກັດເຊມາເນວ່າ: "ບໍ່ແມ່ນຕາມທີ່ຂ້ານ້ອຍປະສົງ, ແຕ່ຕາມຄວາມປະສົງຂອງພຣະອົງ". ກ່ອນທີ່ພຣະອົງຖືກຄຶງເທິງໄມ້ກາງແຂນ, ພຣະອົງເປັນພຽງກະສັດຂອງຊາວຢິວ; ພຣະອົງເປັນພຣະຄຣິດ, ບຸດມະນຸດ ແລະບໍ່ແມ່ນບຸກຄົນທີ່ມີສະຫງ່າລາສີ. ນັ້ນຄືເຫດຜົນທີ່ວ່າ ເປັນຫຍັງພຣະອົງຈຶ່ງເອີ້ນພຣະເຈົ້າວ່າພຣະບິດາຈາກຈຸດຢືນຂອງສິ່ງທີ່ຖືກສ້າງ. ບັດນີ້ ເຈົ້າບໍ່ສາມາດເວົ້າວ່າ ທຸກຄົນທີ່ເອີ້ນພຣະເຈົ້າວ່າພຣະບິດາແມ່ນພຣະບຸດ. ຖ້າເປັນແບບນີ້, ແລ້ວພວກເຈົ້າທຸກຄົນຈະບໍ່ກາຍມາເປັນພຣະບຸດບໍ ຫຼັງຈາກທີ່ພຣະເຢຊູໄດ້ສອນພວກເຈົ້າກ່ຽວກັບຄຳອະທິຖານຂອງພຣະຜູ້ເປັນເຈົ້າ? ຖ້າພວກເຈົ້າຍັງບໍ່ເຊື່ອອີກ, ແລ້ວຈົ່ງບອກເຮົາໄດ້ບໍວ່າ ແມ່ນໃຜຄືຜູ້ທີ່ພວກເຈົ້າເອີ້ນວ່າ ພຣະບິດາ? ຖ້າພວກເຈົ້າກຳລັງໝາຍເຖິງພຣະເຢຊູ, ແລ້ວແມ່ນໃຜເປັນພຣະບິດາຂອງພຣະເຢຊູສຳລັບພວກເຈົ້າ? ຫຼັງຈາກທີ່ພຣະເຢຊູຈາກໄປ, ແນວຄິດນີ້ກ່ຽວກັບພຣະບິດາ ແລະ ພຣະບຸດກໍບໍ່ມີຢູ່ອີກ. ແນວຄິດນີ້ພຽງແຕ່ເໝາະສົມໃນປີທີ່ພຣະເຢຊູກາຍມາເປັນເນື້ອໜັງ; ພາຍໃຕ້ທຸກກໍລະນີ, ຄວາມສຳພັນແມ່ນຄວາມສຳພັນລະຫວ່າງພຣະຜູ້ເປັນເຈົ້າແຫ່ງການເນລະມິດສ້າງ ແລະ ສິ່ງຖືກສ້າງ ເມື່ອພວກເຈົ້າເອີ້ນພຣະເຈົ້າວ່າ ພຣະບິດາ. ບໍ່ມີເມື່ອໃດທີ່ແນວຄິດນີ້ກ່ຽວກັບພຣະເຈົ້າຕຣີເອການຸພາບທີ່ມີພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດສາມາດເປັນຈິງໄດ້; ມັນເປັນຄວາມເຊື່ອຜິດທີ່ບໍ່ຄ່ອຍເຫັນໃນຍຸກຕ່າງໆ ແລະ ມັນບໍ່ມີຢູ່ຈິງ!

ສິ່ງນີ້ອາດເຮັດໃຫ້ຄົນສ່ວນໃຫຍ່ຈົດຈຳພຣະທຳຂອງພຣະເຈົ້າຈາກປະຖົມມະການ: "ໃຫ້ພວກເຮົາສ້າງມະນຸດໃນຮູບຮ່າງລັກສະນະຂອງພວກເຮົາ ຕາມຄວາມຄ້າຍຄືກັບພວກເຮົາ" (ປະຖົມມະການ 1:26). ເນື່ອງຈາກພຣະເຈົ້າກ່າວວ່າ "ໃຫ້ພວກເຮົາສ້າງມະນຸດໃນຮູບລັກສະນະຂອງພວກເຮົາ", ແລ້ວ "ພວກເຮົາ" ກໍບົ່ງບອກເຖິງສອງບຸກຄົນ ຫຼື ຫຼາຍກວ່ານັ້ນ; ຍ້ອນພຣະອົງກ່າວວ່າ "ພວກເຮົາ", ສະນັ້ນຈຶ່ງບໍ່ມີພຽງແຕ່ພຣະເຈົ້າອົງດຽວເທົ່ານັ້ນ. ດ້ວຍເຫດນີ້, ມະນຸດຈຶ່ງເລີ່ມຄິດໃນດ້ານທິດສະດີກ່ຽວກັບຕົວຕົນທີ່ແຕກຕ່າງກັນ ແລະ ຈາກຂໍ້ພຣະທຳເຫຼົ່ານີ້ຈຶ່ງເກີດມີແນວຄວາມຄິດກ່ຽວກັບພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ. ແລ້ວພຣະບິດາເປັນຄືແນວໃດ? ພຣະບຸດເປັນຄືແນວໃດ? ແລ້ວພຣະວິນຍານບໍລິສຸດເປັນຄືແນວໃດ? ເປັນໄປໄດ້ບໍວ່າ ມະນຸດຊາດໃນປັດຈຸບັນຖືກສ້າງໃນລັກສະນະຂອງພຣະເຈົ້າສາມອົງທີ່ລວມເຂົ້າກັນເປັນອົງດຽວ? ແລ້ວລັກສະນະຂອງມະນຸດຄືກັບພຣະບິດາ, ພຣະບຸດ ຫຼື ພຣະວິນຍານບໍລິສຸດບໍ? ໃນຕົວຕົນຂອງພຣະເຈົ້າ ມະນຸດແມ່ນຢູ່ໃນລັກສະນະໃດ? ແນວຄວາມຄິດນີ້ຂອງມະນຸດແມ່ນບໍ່ຖືກຕ້ອງ ແລະ ບໍ່ມີເຫດຜົນເລີຍແທ້ໆ! ມັນສາມາດພຽງແຕ່ແຍກພຣະເຈົ້າອົງດຽວອອກເປັນສອງສາມອົງ. ໃນເວລາທີ່ໂມເຊຂຽນປະຖົມມະການນັ້ນ ມັນແມ່ນຫຼັງຈາກ

ທີ່ມະນຸດຊາດຖືກສ້າງຂຶ້ນຫຼັງຈາກການສ້າງໂລກ. ໃນເບື້ອງຕົ້ນນັ້ນ, ເມື່ອໂລກເລີ່ມຕົ້ນຂຶ້ນ, ໂມເຊຍັງບໍ່ໄດ້ເກີດ. ແລ້ວໂມເຊກໍບໍ່ໄດ້ຂຽນພຣະຄຳພີໃນຕອນນັ້ນ ຈົນກວ່າເວລາຕໍ່ມາ ເຊິ່ງເປັນເວລາດົນນານພໍສົມຄວນ ທີ່ລາວຂຽນພຣະຄຳພີຂຶ້ນ, ແລ້ວລາວຈະຮູ້ໄດ້ແນວໃດ ວ່າຜູ້ທີ່ເວົ້ານັ້ນເປັນພຣະເຈົ້າຢູ່ໃນສະຫວັນ? ລາວບໍ່ມີຄວາມຮູ້ຫຍັງເລີຍກ່ຽວກັບວິທີທີ່ພຣະເຈົ້າສ້າງແຜ່ນດິນໂລກ. ໃນພຣະສັນຍາເດີມຂອງພຣະຄຳພີ, ບໍ່ມີການກ່າວເຖິງພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ, ມີພຽງແຕ່ພຣະເຈົ້າທີ່ແທ້ຈິງອົງດຽວເທົ່ານັ້ນ ນັ້ນກໍຄື ພຣະເຢໂຮວາ ທີ່ກຳລັງປະຕິບັດພາລະກິດຂອງພຣະອົງໃນອິດສະຣາເອນ. ພຣະອົງຖືກເອີ້ນໂດຍພຣະນາມທີ່ແຕກຕ່າງກັນໃນແຕ່ລະຍຸກ, ແຕ່ນີ້ກໍບໍ່ໄດ້ພິສູດວ່າແຕ່ລະພຣະນາມແມ່ນໝາຍເຖິງຕົວຕົນທີ່ແຕກຕ່າງກັນ. ຖ້າເປັນແບບນີ້, ແລ້ວມັນຈະບໍ່ມີຫຼາຍຕົວຕົນຈົນນັບບໍ່ໄດ້ໃນພຣະເຈົ້າບໍ? ສິ່ງທີ່ຖືກຂຽນໃນພຣະສັນຍາເດີມແມ່ນພາລະກິດຂອງພຣະເຢໂຮວາ, ຂັ້ນຕອນພາລະກິດຂອງພຣະເຈົ້າເອງສຳລັບການເລີ່ມຕົ້ນໃນຍຸກແຫ່ງພຣະບັນຍັດ. ມັນຄືພາລະກິດຂອງພຣະເຈົ້າ ເຊິ່ງເມື່ອພຣະອົງກ່າວ, ທຸກສິ່ງກໍເປັນໄປຕາມນັ້ນ ແລະ ເມື່ອພຣະອົງສັ່ງ ທຸກສິ່ງກໍຕັ້ງໝັ້ນ. ບໍ່ມີເມື່ອໃດທີ່ພຣະເຢໂຮວາກ່າວວ່າພຣະອົງເປັນພຣະບິດາທີ່ມາປະຕິບັດພາລະກິດ ຫຼື ພຣະອົງບໍ່ເຄີຍທຳນາຍເຖິງພຣະບຸດທີ່ຈະມາເພື່ອໄຖ່ບາບມະນຸດຊາດ. ເມື່ອມາເຖິງເວລາຂອງພຣະເຢຊູ, ກໍມີພຽງແຕ່ກ່າວວ່າ ພຣະເຈົ້າກາຍເປັນເນື້ອໜັງເພື່ອໄຖ່ບາບມະນຸດຊາດທັງປວງ, ບໍ່ແມ່ນ ນັ້ນຄືພຣະບຸດທີ່ໄດ້ສະເດັດມາ. ເພາະວ່າຍຸກຕ່າງໆບໍ່ຄືກັນ ແລະ ພາລະກິດທີ່ພຣະເຈົ້າເອງປະຕິບັດກໍຍັງແຕກຕ່າງກັນ, ພຣະອົງຈຶ່ງຈຳເປັນຕ້ອງປະຕິບັດພາລະກິດຂອງພຣະອົງພາຍໃນຂອບເຂດທີ່ແຕກຕ່າງກັນ. ດ້ວຍເຫດນີ້, ຕົວຕົນທີ່ພຣະອົງສະແດງອອກມາຈຶ່ງແຕກຕ່າງກັນອີກດ້ວຍ. ມະນຸດເຊື່ອວ່າ ພຣະເຢໂຮວາເປັນພຣະບິດາຂອງພຣະເຢຊູ, ແຕ່ສິ່ງນີ້ບໍ່ໄດ້ຖືກຮັບຮູ້ໂດຍພຣະເຢຊູເລີຍ ຜູ້ທີ່ກ່າວວ່າ "ພວກເຮົາບໍ່ເຄີຍຖືກຈຳແນກວ່າເປັນພຣະບິດາ ແລະ ພຣະບຸດ; ເຮົາ ແລະ ພຣະບິດາທີ່ຢູ່ໃນສະຫວັນເປັນໜຶ່ງດຽວກັນ. ພຣະບິດາຢູ່ໃນເຮົາ ແລະ ເຮົາກໍຢູ່ໃນພຣະບິດາ; ເມື່ອມະນຸດເຫັນພຣະບຸດ, ພວກເຂົາກໍກຳລັງເຫັນພຣະບິດາໃນສະຫວັນ". ເມື່ອທຸກສິ່ງຖືກກ່າວອອກມາ ເຖິງຈະເປັນພຣະບິດາ ຫຼື ພຣະບຸດ, ທັງສອງພຣະອົງກໍເປັນພຣະວິນຍານອົງດຽວກັນ, ບໍ່ໄດ້ຖືກແບ່ງອອກເປັນຕົວຕົນທີ່ແຍກກັນ. ເມື່ອມະນຸດພະຍາຍາມອະທິບາຍ, ເລື່ອງຕ່າງໆກໍຊັບຊ້ອນໄປດ້ວຍແນວຄິດກ່ຽວກັບຕົວຕົນທີ່ແຕກຕ່າງກັນ ພ້ອມທັງຄວາມສຳພັນລະຫວ່າງພຣະບິດາ, ພຣະບຸດ ແລະ ພຣະວິນຍານ. ເມື່ອມະນຸດກ່າວເຖິງຕົວຕົນທີ່ແຕກຕ່າງກັນ, ສິ່ງນີ້ບໍ່ໄດ້ການເຮັດໃຫ້ພຣະເຈົ້າເປັນວັດຖຸບໍ? ມະນຸດເຖິງກັບຈັດລະດັບຕົວຕົນໃຫ້ເປັນທີໜຶ່ງ, ທີສອງ ແລະ ທີສາມ; ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຈິນຕະນາການຂອງມະນຸດ, ບໍ່ສົມຄວນແກ່ການອ້າງເຖິງ ແລະ ບໍ່ເປັນຈິງທັງສິ້ນ! ຖ້າເຈົ້າຖາມເຂົາວ່າ "ມີພຣະເຈົ້າຈັກອົງ?" ເຂົາຈະຕອບວ່າ ພຣະເຈົ້າເປັນພຣະເຈົ້າຕຣີເອການຸພາບທີ່ມີພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ ນັ້ນກໍຄື ພຣະເຈົ້າທີ່ແທ້ຈິງໜຶ່ງດຽວ. ຖ້າເຈົ້າຖາມຕໍ່ໄປວ່າ "ແມ່ນໃຜຄືພຣະບິດາ?" ເຂົາກໍຈະຕອບວ່າ "ພຣະບິດາເປັນພຣະວິນຍານຂອງພຣະເຈົ້າທີ່ຢູ່ໃນສະຫວັນ; ພຣະອົງຄວບຄຸມທຸກສິ່ງຢ່າງ ແລະ ເປັນເຈົ້ານາຍຂອງສະຫວັນ". "ແລ້ວພຣະເຢໂຮວາແມ່ນພຣະວິນຍານບໍ?" ເຂົາກໍຈະຕອບວ່າ "ແມ່ນແລ້ວ!" ແລ້ວຖ້າເຈົ້າ

ຖາມເຂົາວ່າ "ແມ່ນໃຜຄືພຣະບຸດ?" ເຂົາກໍຈະຕອບວ່າ ແນ່ນອນ ພຣະເຢຊູເປັນພຣະບຸດ. "ແລ້ວແມ່ນຫຍັງຄືເລື່ອງລາວຂອງພຣະເຢຊູ? ພຣະອົງມາຈາກໃສ?" ເຂົາກໍຈະຕອບວ່າ "ພຣະເຢຊູເກີດຂຶ້ນໂດຍມາຣີອາຜ່ານທາງການປະຕິສົນທິຂອງພຣະວິນຍານບໍລິສຸດ". ແລ້ວແກ່ນແທ້ຂອງພຣະອົງບໍ່ແມ່ນພຣະວິນຍານເຊັ່ນກັນບໍ? ພາລະກິດຂອງພຣະອົງບໍ່ໄດ້ເປັນຕົວແທນໃຫ້ກັບພຣະວິນຍານບໍລິສຸດເຊັ່ນກັນບໍ? ພຣະເຢໂຮວາເປັນພຣະວິນຍານ ແລະ ດ້ວຍເຫດນັ້ນ ແກ່ນແທ້ຂອງພຣະເຢຊູກໍເຊັ່ນກັນ. ປັດຈຸບັນໃນຍຸກສຸດທ້າຍ, ບໍ່ຈຳເປັນຕ້ອງເວົ້າເລີຍວ່າຍັງເປັນພຣະວິນຍານ; ທັງສາມພຣະອົງສາມາດເປັນຕົວຕົນທີ່ແຕກຕ່າງໄດ້ແນວໃດ? ບໍ່ແມ່ນພຣະວິນຍານຂອງພຣະເຈົ້າແທ້ໆບໍ ທີ່ກຳລັງປະຕິບັດພາລະກິດຂອງພຣະວິນຍານຈາກທັດສະນະທີ່ແຕກຕ່າງກັນ? ເມື່ອເປັນດັ່ງນັ້ນ ຈຶ່ງບໍ່ມີຄວາມແຕກຕ່າງລະຫວ່າງຕົວຕົນຕ່າງໆ. ພຣະເຢຊູຖືກປະຕິສົນທິໂດຍພຣະວິນຍານບໍລິສຸດ ແລະ ບໍ່ຕ້ອງສົງໄສເລີຍພາລະກິດຂອງພຣະອົງເປັນຂອງພຣະວິນຍານບໍລິສຸດຢ່າງແນ່ນອນ. ໃນຂັ້ນຕອນທຳອິດຂອງພາລະກິດທີ່ພຣະເຢໂຮວາປະຕິບັດ, ພຣະອົງບໍ່ໄດ້ກາຍມາເປັນເນື້ອໜັງ ຫຼື ບໍ່ປາກົດຕໍ່ມະນຸດ. ສະນັ້ນ ມະນຸດບໍ່ເຄີຍເຫັນການປາກົດຕົວຂອງພຣະອົງ. ບໍ່ວ່າພຣະອົງຈະຍິ່ງໃຫຍ່ສໍ່າໃດ ແລະ ສູງສົ່ງສໍ່າໃດກໍຕາມ, ພຣະອົງກໍຍັງເປັນພຣະວິນຍານ, ພຣະເຈົ້າເອງຜູ້ທີ່ສ້າງມະນຸດໃນຕອນຕົ້ນ. ນັ້ນກໍຄື ພຣະອົງເປັນພຣະວິນຍານຂອງພຣະເຈົ້າ. ພຣະອົງກ່າວຕໍ່ມະນຸດຈາກທ່າມກາງກ້ອນເມກ ເຊິ່ງເປັນພຽງພຣະວິນຍານເທົ່ານັ້ນ ແລະ ບໍ່ມີໃຜເປັນພະຍານເຖິງການປາກົດຕົວຂອງພຣະອົງ. ມີແຕ່ໃນຍຸກແຫ່ງພຣະຄຸນ ເມື່ອພຣະວິນຍານຂອງພຣະເຈົ້າມາເປັນເນື້ອໜັງ ແລະ ບັງເກີດເປັນມະນຸດໃນຢູດາຍ, ມະນຸດຈຶ່ງເຫັນຮູບຮ່າງຂອງການບັງເກີດເປັນມະນຸດໃນລັກສະນະຂອງຊາວຢິວເປັນຄັ້ງທຳອິດ. ບໍ່ມີແມ່ນຫຍັງທີ່ກ່ຽວກັບພຣະເຢໂຮວາໃນຕົວພຣະອົງ. ຢ່າງໃດກໍຕາມ, ພຣະອົງຖືກປະຕິສົນທິໂດຍພຣະວິນຍານບໍລິສຸດ ນັ້ນກໍຄື ຖືກປະຕິສົນທິໂດຍພຣະວິນຍານຂອງພຣະເຢໂຮວາເອງ ແລະ ພຣະເຢຊູກໍຍັງບັງເກີດເປັນຕົວຕົນຂອງພຣະວິນຍານຂອງພຣະເຈົ້າ. ສິ່ງທີ່ມະນຸດເຫັນໃນຕອນທຳອິດແມ່ນພຣະວິນຍານບໍລິສຸດລົງມາດັ່ງນົກເຂົາທີ່ເທິງພຣະເຢຊູ; ບໍ່ແມ່ນພຣະວິນຍານທີ່ຈຳກັດຕໍ່ພຣະເຢຊູ, ແຕ່ກົງກັນຂ້າມເປັນພຣະວິນຍານບໍລິສຸດ. ແລ້ວພຣະວິນຍານຂອງພຣະເຢຊູສາມາດແຍກອອກຈາກພຣະວິນຍານບໍລິສຸດໄດ້ບໍ? ຖ້າພຣະເຢຊູເປັນພຣະເຢຊູ, ພຣະບຸດ ແລະ ພຣະວິນຍານບໍລິສຸດກໍເປັນພຣະວິນຍານບໍລິສຸດ, ແລ້ວພຣະອົງທັງສອງຈະສາມາດກາຍເປັນໜຶ່ງດຽວໄດ້ແນວໃດ? ພາລະກິດຈະບໍ່ສາມາດປະຕິບັດໄດ້ຖ້າເປັນແບບນັ້ນ. ພຣະວິນຍານທີ່ຢູ່ພາຍໃນພຣະເຢຊູ, ພຣະວິນຍານທີ່ຢູ່ໃນສະຫວັນ ແລະ ພຣະວິນຍານຂອງພຣະເຢໂຮວາລ້ວນແລ້ວແຕ່ເປັນໜຶ່ງດຽວກັນ. ມັນສາມາດເອີ້ນໄດ້ວ່າ ພຣະວິນຍານບໍລິສຸດ, ພຣະວິນຍານຂອງພຣະເຈົ້າ, ພຣະວິນຍານທີ່ຮຸນແຮງຂຶ້ນເຈັດເທົ່າ ແລະ ພຣະວິນຍານຄຸ້ມຄອງທຸກສິ່ງ. ພຣະວິນຍານຂອງພຣະເຈົ້າສາມາດປະຕິບັດພາລະກິດຫຼາຍຢ່າງ. ພຣະອົງສາມາດສ້າງແຜ່ນດິນໂລກ ແລະ ທຳລາຍມັນໂດຍເຮັດໃຫ້ນໍ້າຖ້ວມແຜ່ນດິນໂລກ; ພຣະອົງສາມາດໄຖ່ບາບມະນຸດຊາດທັງປວງ ແລະ ຍິ່ງໄປກວ່ານັ້ນ ພຣະອົງສາມາດເອົາຊະນະ ແລະ ທຳລາຍມະນຸດຊາດທັງປວງ. ພາລະກິດນີ້ລ້ວນແລ້ວແຕ່ຖືກປະຕິບັດໂດຍພຣະເຈົ້າເອງ ແລະ ບໍ່ສາມາດດຳເນີນການໄດ້

ໂດຍຕົວຕົນໃດໜຶ່ງຂອງພຣະເຈົ້າເພື່ອແທນໃຫ້ພຣະອົງ. ພຣະວິນຍານຂອງພຣະອົງແມ່ນຖືກເອີ້ນດ້ວຍນາມຂອງພຣະເຢໂຮວາ ແລະ ພຣະເຢຊູ ພ້ອມທັງອົງຊົງລິດທານຸພາບສູງສຸດ. ພຣະອົງເປັນພຣະຜູ້ເປັນເຈົ້າ ແລະ ພຣະຄຣິດ. ພຣະອົງຍັງສາມາດກາຍເປັນບຸດມະນຸດໄດ້ອີກ. ພຣະອົງຢູ່ໃນສະຫວັນ ແລະ ຢູ່ເທິງແຜ່ນດິນໂລກອີກດ້ວຍ; ພຣະອົງຢູ່ເໜືອຈັກກະວານ ແລະ ທ່າມກາງຝູງຊົນ. ພຣະອົງເປັນເຈົ້ານາຍໜຶ່ງດຽວຂອງສະຫວັນ ແລະ ແຜ່ນດິນໂລກ! ຕັ້ງແຕ່ເວລາແຫ່ງການເນລະມິດສ້າງຈົນເຖິງປັດຈຸບັນ, ພາລະກິດນີ້ຖືກປະຕິບັດໂດຍພຣະວິນຍານຂອງພຣະເຈົ້າເອງ. ບໍ່ວ່າຈະເປັນພາລະກິດທີ່ຢູ່ໃນສະຫວັນ ຫຼື ຢູ່ໃນເນື້ອໜັງ, ທຸກຢ່າງແມ່ນຖືກປະຕິບັດໂດຍພຣະວິນຍານຂອງພຣະອົງເອງ. ສິ່ງຖືກສ້າງທັງປວງ ບໍ່ວ່າຈະຢູ່ໃນສະຫວັນ ຫຼື ຢູ່ເທິງແຜ່ນດິນໂລກ ແມ່ນຢູ່ໃນກຳມືທີ່ມີລິດທານຸພາບສູງສຸດຂອງພຣະອົງ; ທຸກສິ່ງນີ້ແມ່ນພາລະກິດຂອງພຣະເຈົ້າເອງ ແລະ ຄົນອື່ນບໍ່ສາມາດປະຕິບັດແທນພຣະອົງໄດ້. ໃນສະຫວັນ, ພຣະອົງເປັນພຣະວິນຍານ ແຕ່ຍັງຄົງເປັນພຣະເຈົ້າເອງ; ທ່າມກາງມະນຸດ, ພຣະອົງເປັນເນື້ອໜັງ ແຕ່ຍັງຄົງເປັນພຣະເຈົ້າເອງ. ເຖິງແມ່ນວ່າ ພຣະອົງຈະຖືກເອີ້ນຫຼາຍຮ້ອຍຫຼາຍພັນຊື່, ພຣະອົງກໍຍັງເປັນພຣະອົງເອງ, ເປັນການສຳແດງອອກໂດຍກົງຂອງພຣະວິນຍານຂອງພຣະອົງ. ການໄຖ່ບາບມະນຸດຊາດທັງປວງຜ່ານການຄຶງໃສ່ໄມ້ກາງແຂນຂອງພຣະອົງ ກໍເປັນພາລະກິດໂດຍກົງຂອງພຣະວິນຍານຂອງພຣະອົງ ແລະ ການປະກາດຕໍ່ບັນດາປະຊາຊາດ ແລະ ແຜ່ນດິນທັງໝົດໃນລະຫວ່າງຍຸກສຸດທ້າຍເຊັ່ນດຽວກັນ. ຕະຫຼອດເວລາ ພຣະເຈົ້າພຽງສາມາດຖືກເອີ້ນໄດ້ວ່າ ອົງຊົງລິດທານຸພາບສູງສຸດ ແລະ ພຣະເຈົ້າແທ້ຈິງໜຶ່ງດຽວ, ພຣະເຈົ້າທີ່ຄຸ້ມຄອງສັບພະສິ່ງທັງປວງ. ຕົວຕົນທີ່ແຕກຕ່າງກັນແມ່ນບໍ່ມີຢູ່ຈິງ ແລ້ວແຮງໄກທີ່ຈະມີແນວຄິດກ່ຽວກັບພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ. ມີພຽງພຣະເຈົ້າໜຶ່ງດຽວທີ່ຢູ່ໃນສະຫວັນ ແລະ ເທິງແຜ່ນດິນໂລກ!

ແຜນການຄຸ້ມຄອງຂອງພຣະເຈົ້າກວມເວລາຫົກພັນປີ ແລະ ຖືກແບ່ງອອກເປັນສາມຍຸກໂດຍອີງຕາມຄວາມແຕກຕ່າງໃນພາລະກິດຂອງພຣະອົງ: ຍຸກທຳອິດແມ່ນຍຸກແຫ່ງພຣະບັນຍັດໃນພຣະສັນຍາເດີມ; ຍຸກທີສອງແມ່ນຍຸກແຫ່ງພຣະຄຸນ; ແລະ ຍຸກທີສາມແມ່ນຍຸກສຸດທ້າຍ ນັ້ນກໍຄື ຍຸກແຫ່ງລາຊະອານາຈັກ. ໃນແຕ່ລະຍຸກ ກໍຈະຖືກແທນໃຫ້ດ້ວຍຕົວຕົນທີ່ແຕກຕ່າງກັນ. ນີ້ກໍຍ້ອນຄວາມແຕກຕ່າງກັນໃນພາລະກິດ ນັ້ນກໍຄື ເງື່ອນໄຂຂອງພາລະກິດ. ຂັ້ນຕອນທຳອິດຂອງພາລະກິດໃນລະຫວ່າງຍຸກແຫ່ງພຣະບັນຍັດແມ່ນຖືກປະຕິບັດໃນອິດສະຣາເອນ ແລະ ຍຸກທີສອງໃນການສິ້ນສຸດພາລະກິດແຫ່ງການໄຖ່ບາບແມ່ນຖືກປະຕິບັດໃນຢູດາຍ. ສຳລັບພາລະກິດແຫ່ງການໄຖ່ບາບ, ພຣະເຢຊູກຳເນີດຈາກການປະຕິສົນທິຜ່ານພຣະວິນຍານບໍລິສຸດ ແລະ ເປັນພຣະບຸດພຽງອົງດຽວ. ທຸກຢ່າງນີ້ເປັນໄປຕາມເງື່ອນໄຂຂອງພາລະກິດ. ໃນຍຸກສຸດທ້າຍ, ພຣະເຈົ້າປາຖະໜາທີ່ຈະຂະຫຍາຍພາລະກິດຂອງພຣະອົງໄປສູ່ຊົນຕ່າງຊາດ ແລະ ເອົາຊະນະຜູ້ຄົນທີ່ຢູ່ໃນນັ້ນ, ເພື່ອວ່ານາມຂອງພຣະອົງອາດຈະຍິ່ງໃຫຍ່ທ່າມກາງພວກເຂົາ. ພຣະອົງປາຖະໜາທີ່ຈະນຳພາມະນຸດໃນການເຂົ້າໃຈ ແລະ ການເຂົ້າສູ່ຄວາມຈິງທຸກປະການ ພາລະກິດທັງໝົດນີ້ແມ່ນຖືກປະຕິບັດໂດຍພຣະວິນຍານອົງດຽວ. ເຖິງແມ່ນວ່າ ພຣະອົງປະຕິບັດຈາກຈຸດຢືນທີ່ແຕກຕ່າງກັນ, ທຳມະຊາດ ແລະ ຫຼັກການຂອງພາລະກິດແມ່ນຍັງຄືກັນ. ຫຼັງຈາກ

ທີ່ເຈົ້າໄດ້ສັງເກດຫຼັກການ ແລະ ທຳມະຊາດຂອງພາລະກິດທີ່ພຣະອົງໄດ້ປະຕິບັດ, ແລ້ວເຈົ້າກໍຈະຮູ້ວ່າພາລະກິດທັງໝົດຖືກປະຕິບັດໂດຍພຣະວິນຍານອົງດຽວ. ຍັງມີບາງຄົນອາດເວົ້າວ່າ "ພຣະບິດາກໍຄືພຣະບິດາ; ພຣະບຸດກໍຄືພຣະບຸດ; ພຣະວິນຍານບໍລິສຸດກໍຄືພຣະວິນຍານບໍລິສຸດ ແລະ ໃນທີ່ສຸດ ທັງສາມພຣະອົງກໍຈະຖືກເຮັດໃຫ້ເປັນໜຶ່ງດຽວ". ແລ້ວເຈົ້າຄວນເຮັດໃຫ້ທັງສາມພຣະອົງເປັນໜຶ່ງດຽວແນວໃດ? ພຣະບິດາ ແລະ ພຣະວິນຍານບໍລິສຸດຈະສາມາດຖືກເຮັດໃຫ້ເປັນໜຶ່ງດຽວໄດ້ແນວໃດ? ຖ້າທັງສອງພຣະອົງເປັນພຣະເຈົ້າສອງອົງໂດຍທຳມະຊາດ, ແລ້ວບໍ່ວ່າທັງສອງພຣະອົງຈະຖືກຮ່ວມເຂົ້າກັນແນວໃດກໍຕາມ, ທັງສອງພຣະອົງກໍຈະຍັງບໍ່ເປັນສອງສ່ວນຄືເກົ່າບໍ? ເມື່ອເຈົ້າເວົ້າກ່ຽວກັບການເຮັດໃຫ້ທັງສອງພຣະອົງເປັນໜຶ່ງດຽວກັນ, ນັ້ນບໍ່ແມ່ນເປັນການຮວມສອງພາກສ່ວນທີ່ແຕກຕ່າງກັນເຂົ້າເປັນໜຶ່ງດຽວບໍ? ແຕ່ວ່າ ພຣະອົງທັງສອງບໍ່ແມ່ນສອງພາກສ່ວນ ກ່ອນທີ່ຈະຖືກເຮັດໃຫ້ຄົບຖ້ວນບໍ? ວິນຍານແຕ່ລະຕົນແມ່ນມີແກ່ນແທ້ທີ່ແຕກຕ່າງກັນ ແລະ ວິນຍານສອງຕົນບໍ່ສາມາດຖືກເຮັດໃຫ້ເປັນໜຶ່ງດຽວໄດ້. ວິນຍານບໍ່ແມ່ນວັດຖຸ ແລະ ບໍ່ຄືສິ່ງອື່ນໃດໃນໂລກແຫ່ງວັດຖຸ. ດັ່ງທີ່ມະນຸດເຫັນ, ພຣະບິດາຄືພຣະວິນຍານອົງໜຶ່ງ, ອີກອົງໜຶ່ງແມ່ນພຣະບຸດ ແລະ ພຣະວິນຍານບໍລິສຸດແມ່ນອີກອົງໜຶ່ງ, ແລ້ວພຣະວິນຍານສາມອົງຈະຮວມເຂົ້າກັນຄືກັບເອົານໍ້າສາມແກ້ວມາຮວມກັນເປັນແກ້ວດຽວ. ແລ້ວນັ້ນບໍ່ແມ່ນການເຮັດໃຫ້ສາມກາຍເປັນໜຶ່ງບໍ? ນີ້ແມ່ນການອະທິບາຍທີ່ບໍ່ຖືກຕ້ອງ ແລະ ໂງ່ຈ້າແທ້ໆ! ນີ້ບໍ່ແມ່ນການແຍກພຣະເຈົ້າອອກຈາກກັນບໍ? ພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດຈະຖືກເຮັດໃຫ້ເປັນໜຶ່ງດຽວໄດ້ແນວໃດ? ທັງສາມພຣະອົງບໍ່ແມ່ນສາມສ່ວນ ເຊິ່ງແຕ່ລະສ່ວນມີທຳມະຊາດແຕກຕ່າງກັນບໍ? ຍັງມີຄົນອື່ນໆທີ່ເວົ້າວ່າ "ພຣະເຈົ້າບໍ່ໄດ້ລະບຸຢ່າງແຈ່ມແຈ້ງບໍວ່າ ພຣະເຢຊູເປັນພຣະບຸດອັນເປັນທີ່ຮັກຂອງພຣະອົງ?" ພຣະເຢຊູຄືພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ ທີ່ພຣະອົງພໍໃຈເປັນຢ່າງຍິ່ງ, ສິ່ງນີ້ຖືກກ່າວໂດຍພຣະເຈົ້າເອງຢ່າງແນ່ນອນ. ນັ້ນຄືການທີ່ພຣະເຈົ້າເປັນພະຍານໃຫ້ກັບພຣະອົງເອງ, ແຕ່ຈາກທັດສະນະທີ່ແຕກຕ່າງກັນເທົ່ານັ້ນ, ພຣະວິນຍານໃນສະຫວັນເປັນພະຍານໃຫ້ກັບການບັງເກີດເປັນມະນຸດຂອງພຣະອົງເອງ. ພຣະເຢຊູຄືການບັງເກີດເປັນມະນຸດຂອງພຣະອົງ ບໍ່ແມ່ນພຣະບຸດຂອງພຣະອົງທີ່ຢູ່ໃນສະຫວັນ. ເຈົ້າເຂົ້າໃຈບໍ? ພຣະທຳຂອງພຣະເຢຊູທີ່ກ່າວວ່າ "ເຮົາຢູ່ໃນພຣະບິດາ ແລະ ພຣະບິດາກໍຢູ່ໃນເຮົາ" ບໍ່ໄດ້ຊີ້ບອກບໍວ່າ ທັງສອງພຣະອົງເປັນພຣະວິນຍານໜຶ່ງດຽວ? ແລ້ວບໍ່ແມ່ນຍ້ອນການບັງເກີດເປັນມະນຸດບໍ ທີ່ເຮັດໃຫ້ທັງສອງພຣະອົງຖືກແຍກອອກລະຫວ່າງສະຫວັນ ແລະ ແຜ່ນດິນໂລກ? ໃນຄວາມເປັນຈິງແລ້ວ, ພຣະອົງທັງສອງຍັງເປັນໜຶ່ງດຽວ; ບໍ່ວ່າໃນກໍລະນີໃດກໍຕາມ ນີ້ຄືການທີ່ພຣະເຈົ້າເປັນພະຍານໃຫ້ກັບພຣະອົງເອງແທ້ໆ. ຍ້ອນການປ່ຽນແປງໃນຍຸກຕ່າງໆ, ເງື່ອນໄຂຂອງພາລະກິດປ່ຽນແປງ ແລະ ຂັ້ນຕອນທີ່ແຕກຕ່າງກັນຂອງແຜນການຄຸ້ມຄອງຂອງພຣະອົງ, ນາມທີ່ມະນຸດເອີ້ນພຣະອົງຈຶ່ງແຕກຕ່າງເຊັ່ນກັນ. ເມື່ອພຣະອົງລົງມາປະຕິບັດຂັ້ນຕອນທຳອິດຂອງພາລະກິດ, ພຣະອົງພຽງແຕ່ຖືກເອີ້ນວ່າພຣະເຢໂຮວາເທົ່ານັ້ນ, ເຊິ່ງເປັນຄົນລ້ຽງແກະຂອງຊາວອິດສະຣາເອນ. ໃນຂັ້ນຕອນທີສອງ, ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນຖືກເອີ້ນວ່າພຣະຜູ້ເປັນເຈົ້າ ແລະ ພຣະຄຣິດ. ແຕ່ໃນເວລານັ້ນ, ພຣະວິນຍານທີ່ຢູ່ໃນສະຫວັນກໍພຽງກ່າວວ່າ ພຣະອົງເປັນ

ພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ ແລະ ບໍ່ໄດ້ກ່າວເຖິງການທີ່ພຣະອົງເປັນພຣະບຸດອົງດຽວຂອງພຣະເຈົ້າ. ສິ່ງນີ້ແມ່ນບໍ່ໄດ້ເກີດຂຶ້ນແທ້ໆ. ພຣະເຈົ້າຈະສາມາດມີລູກຊາຍພຽງຜູ້ດຽວໄດ້ແນວໃດ? ແລ້ວພຣະເຈົ້າຈະບໍ່ກາຍເປັນມະນຸດບໍ? ຍ້ອນພຣະອົງແມ່ນການບັງເກີດເປັນມະນຸດ, ພຣະອົງຈຶ່ງຖືກເອີ້ນວ່າ ພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ ແລະ ຈາກສິ່ງນີ້ຈຶ່ງເກີດມີຄວາມສຳພັນລະຫວ່າງພຣະບິດາ ແລະ ພຣະບຸດ. ທັງໝົດນີ້ແມ່ນເປັນຍ້ອນການແບ່ງແຍກລະຫວ່າງສະຫວັນ ແລະແຜ່ນດິນໂລກ. ພຣະເຢຊູອະທິຖານຈາກທັດສະນະຂອງເນື້ອໜັງ. ຍ້ອນວ່າ ພຣະອົງໄດ້ສວມໃສ່ເນື້ອໜັງແຫ່ງຄວາມເປັນມະນຸດທຳມະດາດັ່ງກ່າວ, ມັນມາຈາກທັດສະນະຂອງເນື້ອທີ່ພຣະອົງກ່າວວ່າ: "ເປືອກນອກຂອງເຮົາແມ່ນເປັນຂອງສິ່ງຖືກສ້າງ. ຍ້ອນເຮົາສວມໃສ່ເນື້ອໜັງເພື່ອເຂົ້າມາສູ່ໂລກນີ້, ບັດນີ້ ເຮົາຈຶ່ງຫ່າງໄກຈາກສະຫວັນຫຼາຍ". ຍ້ອນເຫດຜົນນີ້, ພຣະອົງຈຶ່ງພຽງແຕ່ສາມາດອະທິຖານຫາພຣະເຈົ້າພຣະບິດາຈາກທັດສະນະຂອງເນື້ອໜັງ. ນີ້ແມ່ນໜ້າທີ່ຂອງພຣະອົງ ແລະ ເປັນສິ່ງທີ່ພຣະວິນຍານທີ່ບັງເກີດເປັນມະນຸດຂອງພຣະເຈົ້າຄວນປະກອບມີ. ມັນບໍ່ສາມາດເວົ້າໄດ້ວ່າ ພຣະອົງບໍ່ແມ່ນພຣະເຈົ້າຍ້ອນພຣະອົງອະທິຖານຫາພຣະບິດາຈາກທັດສະນະຂອງເນື້ອໜັງເທົ່ານັ້ນ. ເຖິງແມ່ນວ່າ ພຣະອົງຖືກເອີ້ນວ່າ ພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ, ພຣະອົງກໍຍັງເປັນພຣະເຈົ້າຢູ່ດີ ນັ້ນກໍຍ້ອນວ່າ ພຣະອົງເປັນພຽງການບັງເກີດເປັນມະນຸດຂອງພຣະວິນຍານ ແລະ ແກ່ນແທ້ຂອງພຣະອົງກໍຍັງເປັນພຣະວິນຍານຄືເກົ່າ. ຜູ້ຄົນສົງໄສວ່າ ເປັນຫຍັງພຣະອົງຈຶ່ງອະທິຖານ ຖ້າພຣະອົງເປັນພຣະເຈົ້າເອງ. ນີ້ກໍເພາະວ່າພຣະອົງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ, ພຣະເຈົ້າທີ່ດຳລົງຊີວິດຢູ່ພາຍໃນເນື້ອໜັງ ແລະ ບໍ່ແມ່ນພຣະວິນຍານທີ່ຢູ່ໃນສະຫວັນ. ຕາມທີ່ມະນຸດເບິ່ງ, ພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດລ້ວນແລ້ວແຕ່ເປັນພຣະເຈົ້າ. ມີພຽງແຕ່ສາມພຣະອົງທີ່ຮວມກັນເປັນໜຶ່ງດຽວກັນເທົ່ານັ້ນ ຈຶ່ງຈະສາມາດຖືໄດ້ວ່າເປັນພຣະເຈົ້າທີ່ແທ້ຈິງໜຶ່ງດຽວ ແລະ ໃນວິທີນີ້ ລິດອຳນາດຂອງພຣະອົງຈຶ່ງຍິ່ງໃຫຍ່ເປັນພິເສດ. ມີຄົນທີ່ເວົ້າວ່າ ໃນວິທີນີ້ເທົ່ານັ້ນ ພຣະອົງຈຶ່ງເປັນພຣະວິນຍານທີ່ຮຸນແຮງຂຶ້ນເຈັດເທົ່າ. ເມື່ອພຣະບຸດອະທິຖານຫຼັງຈາກການມາຂອງພຣະອົງ, ນັ້ນກໍຄື ເປັນພຣະວິນຍານທີ່ພຣະອົງອະທິຖານຫາ. ໃນຄວາມເປັນຈິງແລ້ວ, ພຣະອົງກຳລັງອະທິຖານຈາກທັດສະນະຂອງສິ່ງທີ່ຖືກສ້າງ. ຍ້ອນເນື້ອໜັງບໍ່ຄົບຖ້ວນ, ພຣະອົງຈຶ່ງບໍ່ຄົບຖ້ວນ ແລະ ມີຈຸດອ່ອນຫຼາຍຢ່າງ ເມື່ອພຣະອົງກາຍມາເປັນເນື້ອໜັງ ແລະພຣະອົງວຸ້ນວາຍຫຼາຍໃນຂະນະທີ່ພຣະອົງປະຕິບັດພາລະກິດຂອງພຣະອົງໃນເນື້ອໜັງ. ນັ້ນຄືເຫດຜົນທີ່ວ່າ ເປັນຫຍັງພຣະອົງຈຶ່ງອະທິຖານຫາພຣະເຈົ້າພຣະບິດາສາມຄັ້ງກ່ອນທີ່ພຣະອົງຈະຖືກຄຶງເທິງໄມ້ກາງແຂນ ພ້ອມທັງອະທິຖານຫຼາຍຄັ້ງກ່ອນໜ້ານັ້ນ. ພຣະອົງອະທິຖານທ່າມກາງສາວົກຂອງພຣະອົງ; ພຣະອົງອະທິຖານຜູ້ດຽວເທິງພູເຂົາ; ພຣະອົງອະທິຖານເມື່ອຢູ່ເທິງເຮືອປະມົງ; ພຣະອົງອະທິຖານທ່າມກາງຝູງຊົນ; ພຣະອົງອະທິຖານເມື່ອກຳລັງຫັກເຂົ້າຈີ່; ແລະ ພຣະອົງອະທິຖານເມື່ອກຳລັງອວຍພອນຄົນອື່ນ. ເປັນຫຍັງພຣະອົງຈຶ່ງເຮັດແບບນັ້ນ? ແມ່ນພຣະວິນຍານທີ່ພຣະອົງກຳລັງອະທິຖານຫາ; ພຣະອົງອະທິຖານຫາພຣະວິນຍານ, ຫາພຣະເຈົ້າທີ່ຢູ່ໃນສະຫວັນ ຈາກທັດສະນະຂອງເນື້ອໜັງ. ສະນັ້ນຈາກຈຸດຢືນຂອງມະນຸດ, ພຣະເຢຊູກາຍມາເປັນພຣະບຸດໃນຂັ້ນຕອນນັ້ນຂອງພາລະກິດ. ເຖິງຢ່າງໃດ

ກໍຕາມ ໃນຂັ້ນຕອນນີ້ ພຣະອົງບໍ່ໄດ້ອະທິຖານ. ເປັນຫຍັງຈຶ່ງເປັນແບບນີ້? ນີ້ກໍຍ້ອນວ່າ ສິ່ງທີ່ພຣະອົງນໍາອອກມາແມ່ນພາລະກິດແຫ່ງພຣະທໍາ ແລະ ການພິພາກສາ ແລະ ການຕີສອນຂອງພຣະທໍາ. ພຣະອົງບໍ່ຈໍາເປັນຕ້ອງອະທິຖານ ແລະ ພັນທະກິດຂອງພຣະອົງແມ່ນເພື່ອກ່າວພຣະທໍາ. ພຣະອົງບໍ່ໄດ້ຖືກຄຶງໃສ່ໄມ້ກາງແຂນ ແລະ ພຣະອົງບໍ່ໄດ້ຖືກມະນຸດສົ່ງມອບພຣະອົງໃຫ້ກັບຄົນທີ່ມີອໍານາດ. ພຣະອົງພຽງແຕ່ປະຕິບັດພາລະກິດຂອງພຣະອົງ. ໃນເວລາທີ່ພຣະເຢຊູອະທິຖານ, ພຣະອົງອະທິຖານຫາພຣະເຈົ້າພຣະບິດາເພື່ອການລົງມາຂອງອານາຈັກສະຫວັນ, ເພື່ອຄວາມປະສົງຂອງພຣະບິດາຈະຖືກເຮັດໃຫ້ສໍາເລັດ ແລະ ເພື່ອພາລະກິດທີ່ຈະມາ. ໃນຂັ້ນຕອນນີ້, ອານາຈັກສະຫວັນໄດ້ລົງມາແລ້ວ, ສະນັ້ນພຣະອົງຍັງຈໍາເປັນຕ້ອງອະທິຖານຢູ່ບໍ? ພາລະກິດຂອງພຣະອົງແມ່ນເພື່ອນໍາຍຸກໄປສູ່ເວລາສຸດທ້າຍ ແລະ ບໍ່ມີຍຸກໃໝ່ອີກຕໍ່ໄປ, ແລ້ວຈໍາເປັນຕ້ອງອະທິຖານສໍາລັບຍຸກຕໍ່ໄປບໍ? ເຮົາຢ້ານວ່າບໍ່ຈໍາເປັນ!

ມີຂໍ້ຂັດແຍ້ງຫຼາຍຢ່າງໃນການອະທິບາຍຂອງມະນຸດ. ແນ່ນອນ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນແນວຄິດຂອງມະນຸດ; ຫາກປາສະຈາກການພິຈາລະນາເພີ່ມເຕີມຢ່າງລະອຽດ, ພວກເຈົ້າທຸກຄົນກໍຈະເຊື່ອວ່າ ສິ່ງເຫຼົ່ານັ້ນຖືກຕ້ອງ. ພວກເຈົ້າບໍ່ຮູ້ບໍວ່າແນວຄວາມຄິດດັ່ງກ່າວໃນພຣະເຈົ້າສາມອົງເປັນພຽງແນວຄິດຂອງມະນຸດ? ບໍ່ມີຄວາມຮູ້ໃດຂອງມະນຸດທີ່ສົມບູນ ແລະ ທົ່ວເຖິງ. ມີຄວາມບໍ່ບໍລິສຸດຢູ່ສະເໝີ ແລະ ມະນຸດແມ່ນມີແນວຄິດຫຼາຍເກີນໄປ; ສິ່ງນີ້ສະແດງໃຫ້ເຫັນວ່າ ສິ່ງຖືກສ້າງບໍ່ສາມາດອະທິບາຍເຖິງພາລະກິດຂອງພຣະເຈົ້າໄດ້ຢ່າງແທ້ຈິງ. ມີຫຼາຍສິ່ງເກີນໄປໃນຄວາມຄິດຂອງມະນຸດ, ທຸກສິ່ງມາຈາກເຫດຜົນ ແລະ ຄວາມຄິດ ເຊິ່ງຂັດກັບຄວາມຈິງ. ເຫດຜົນຂອງເຈົ້າສາມາດວິເຄາະພາລະກິດຂອງພຣະເຈົ້າໄດ້ຢ່າງທົ່ວເຖິງບໍ? ເຈົ້າສາມາດຮັບເອົາຄວາມເຂົ້າໃຈໃນພາລະກິດທັງໝົດຂອງພຣະເຢໂຮວາບໍ່? ແມ່ນເຈົ້າບໍ ທີ່ເປັນມະນຸດຜູ້ທີ່ເຫັນຜ່ານທຸກສິ່ງ ຫຼື ແມ່ນພຣະເຈົ້າເອງທີ່ສາມາດເຫັນຕະຫຼອດໄປເປັນນິດນິລັນ? ແມ່ນເຈົ້າບໍ ທີ່ສາມາດເຫັນຈາກອະດີດຈົນເຖິງອະນາຄົດຕະຫຼອດໄປເປັນນິດ ຫຼື ເປັນພຣະເຈົ້າທີ່ສາມາດເຮັດແບບນັ້ນໄດ້? ເຈົ້າຈະເວົ້າແນວໃດ? ເຈົ້າຈະສົມຄວນອະທິບາຍພຣະເຈົ້າໄດ້ແນວໃດ? ການອະທິບາຍຂອງເຈົ້າແມ່ນອີງຕາມພື້ນຖານຫຍັງ? ເຈົ້າເປັນພຣະເຈົ້າບໍ? ສະຫວັນ ແລະ ແຜ່ນດິນໂລກ ແລະ ສິ່ງທັງປວງກໍ່ຖືກສ້າງໂດຍພຣະເຈົ້າເອງ. ບໍ່ແມ່ນເຈົ້າທີ່ເຮັດສິ່ງນີ້, ແລ້ວເປັນຫຍັງເຈົ້າຈຶ່ງອະທິບາຍຢ່າງບໍ່ຖືກຕ້ອງ? ບັດນີ້, ເຈົ້າຈະສືບຕໍ່ເຊື່ອໃນພຣະເຈົ້າຕຣີເອການຸພາບຢູ່ບໍ? ເຈົ້າບໍ່ຄິດບໍ່ວ່າ ການເຊື່ອແບບນັ້ນແມ່ນມີພາລະຫຼາຍເກີນໄປ? ມັນຈະເປັນການດີທີ່ສຸດ ຖ້າເຈົ້າເຊື່ອໃນພຣະເຈົ້າໜຶ່ງດຽວ, ບໍ່ແມ່ນໃນພຣະເຈົ້າສາມພຣະອົງ. ມັນເປັນການດີທີ່ສຸດທີ່ຈະເປັນແສງສະຫວ່າງ ເພາະວ່າ ພາລະຂອງພຣະຜູ້ເປັນເຈົ້າຄືແສງສະຫວ່າງ.

# ການປະຕິບັດ (3)

ພວກເຈົ້າຕ້ອງມີຄວາມສາມາດທີ່ຈະດຳລົງຊີວິດຢູ່ຢ່າງອິດສະຫຼະ, ສາມາດກິນ ແລະ ດື່ມພຣະທຳຂອງພຣະເຈົ້າໂດຍພວກເຈົ້າເອງ, ສາມາດພະເຊີນກັບພຣະທຳຂອງພຣະເຈົ້າດ້ວຍຕົວພວກເຈົ້າເອງ ແລະ ດຳລົງຊີວິດຝ່າຍວິນຍານທີ່ປົກກະຕິໂດຍປາສະຈາກການນຳພາຂອງຄົນອື່ນ. ພວກເຈົ້າຕ້ອງສາມາດເພິ່ງພາພຣະທຳທີ່ພຣະເຈົ້າກ່າວໃນປັດຈຸບັນເພື່ອດຳລົງຊີວິດ, ເຂົ້າສູ່ປະສົບການທີ່ແທ້ຈິງ ແລະ ຮັບເອົາຄວາມເຂົ້າໃຈທີ່ແທ້ຈິງ. ມີພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ ພວກເຈົ້າຈຶ່ງຈະສາມາດຍຶດໝັ້ນໄດ້. ໃນປັດຈຸບັນ, ຫຼາຍຄົນບໍ່ເຂົ້າໃຈຄວາມລຳບາກຍາກແຄ້ນ ແລະ ການທົດລອງໃນອະນາຄົດຢ່າງສົມບູນ. ໃນອະນາຄົດ, ບາງຄົນຈະພະເຊີນກັບຄວາມລຳບາກຍາກແຄ້ນ ແລະ ບາງຄົນຈະພະເຊີນກັບການລົງໂທດ. ການລົງໂທດນີ້ຈະຮ້າຍແຮງຫຼາຍຍິ່ງຂຶ້ນ; ມັນຈະເປັນການມາເຖິງຂອງຄວາມຈິງ. ໃນປັດຈຸບັນ ທຸກສິ່ງທີ່ເຈົ້າພະເຊີນ, ປະຕິບັດ ແລະ ສະແດງອອກ ໄດ້ວາງພື້ນຖານສຳລັບການທົດລອງໃນອະນາຄົດ ແລະ ຢ່າງໜ້ອຍທີ່ສຸດ ເຈົ້າຕ້ອງສາມາດດຳລົງຊີວິດຢ່າງເປັນອິດສະຫຼະ. ໃນປັດຈຸບັນ, ໂດຍທົ່ວໄປແລ້ວ ສະຖານະການທີ່ກ່ຽວກັບຫຼາຍຄົນໃນຄຣິສຕະຈັກແມ່ນເປັນຄືດັ່ງຕໍ່ໄປນີ້: ຖ້າມີຜູ້ນຳ ແລະ ຜູ້ເຮັດວຽກປະຕິບັດພາລະກິດ, ພວກເຂົາກໍມີຄວາມສຸກ ແລະ ຖ້າບໍ່ມີ ພວກເຂົາກໍບໍ່ມີຄວາມສຸກ. ພວກເຂົາບໍ່ສົນໃຈຕໍ່ພາລະກິດຂອງຄຣິສຕະຈັກ ຫຼື ຕໍ່ຊີວິດຝ່າຍວິນຍານຂອງພວກເຂົາເອງ ແລະ ບໍ່ມີພາລະແມ່ນແຕ່ໜ້ອຍດຽວ, ພວກເຂົາດຳເນີນຊີວິດໂດຍບໍ່ມີຈຸດໝາຍປາຍທາງຄືກັບນົກຮານເຮົາ[ກ]. ເວົ້າແບບກົງໄປກົງມາກໍຄື ພາລະກິດທີ່ເຮົາປະຕິບັດໃນຫຼາຍໆຄົນເປັນພຽງພາລະກິດແຫ່ງການເອົາຊະນະ, ຍ້ອນວ່າ ໂດຍພື້ນຖານແລ້ວ ຫຼາຍຄົນແມ່ນບໍ່ເໝາະສົມແກ່ການຖືກເຮັດໃຫ້ສົມບູນ. ມີພຽງແຕ່ຄົນສ່ວນໜ້ອຍເທົ່ານັ້ນທີ່ສາມາດຖືກເຮັດໃຫ້ສົມບູນໄດ້. ຖ້າເມື່ອໄດ້ຍິນພຣະທຳເຫຼົ່ານີ້ແລ້ວ, ເຈົ້າຄິດວ່າ "ຍ້ອນພາລະກິດທີ່ພຣະເຈົ້າປະຕິບັດແມ່ນເພື່ອເອົາຊະນະຜູ້ຄົນເທົ່ານັ້ນ, ຂ້ານ້ອຍກໍຈະປະຕິບັດພໍເປັນພິທີເທົ່ານັ້ນ", ທັດສະນະຄະຕິດັ່ງກ່າວຈະເປັນທີ່ຍອມຮັບໄດ້ແນວໃດ? ຖ້າເຈົ້າມີຄວາມສຳນຶກແທ້ໆ, ແລ້ວເຈົ້າຕ້ອງມີພາລະ ແລະ ສຳນຶກໃນຄວາມຮັບຜິດຊອບ. ເຈົ້າຕ້ອງເວົ້າວ່າ "ບໍ່ວ່າຂ້ານ້ອຍຈະຖືກເອົາຊະນະ ຫຼື ຖືກເຮັດໃຫ້ສົມບູນ ຫຼື ບໍ່, ຂ້ານ້ອຍກໍຕ້ອງແບກຮັບເອົາຂັ້ນຕອນຂອງການເປັນພະຍານນີ້ຢ່າງຖືກຕ້ອງ". ໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ, ຄົນໃດໜຶ່ງສາມາດຖືກເອົາຊະນະໂດຍພຣະເຈົ້າຢ່າງສົມບູນ ແລະ ໃນທີ່ສຸດ ຄົນໆນັ້ນກໍຈະສາມາດເຮັດໃຫ້ພຣະເຈົ້າເພິ່ງພໍໃຈ, ຕອບແທນຄວາມຮັກຂອງພຣະເຈົ້າດ້ວຍຫົວໃຈທີ່ຮັກພຣະເຈົ້າ ແລະ ໂດຍການອຸທິດ

ກ ເລື່ອງລາວຂອງນົກຮານເຮົານັ້ນແມ່ນຄ້າຍຄືກັນຫຼາຍກັບນິທານອີສົບ (Aesop) ທີ່ກ່ຽວກັບມົດ ແລະ ຕັກກະແຕນ. ນົກຮານເຮົາເລືອກທີ່ຈະນອນຫຼັບ ແທນທີ່ຈະສ້າງຮັງໃນຂະນະທີ່ອາກາດນັ້ນອົບອຸ່ນຢູ່, ເຖິງແມ່ນວ່າ ຈະມີຄຳຕັກເຕືອນຊ້ຳແລ້ວຊ້ຳອີກຈາກນົກກາງເຂນທີ່ເປັນເພື່ອນບ້ານຂອງມັນ. ເມື່ອລະດູໜາວມາຮອດ ນົກໂຕນັ້ນກໍແຂງກະດ້າງຕາຍ.

ຕົນເອງໃຫ້ກັບພຣະເຈົ້າຢ່າງສົມບູນ. ນີ້ແມ່ນຄວາມຮັບຜິດຊອບຂອງມະນຸດ, ມັນເປັນໜ້າທີ່ງມະນຸດຄວນປະຕິບັດ ແລະ ພາລະທີ່ມະນຸດຄວນແບກຮັບ ແລະ ມະນຸດຕ້ອງເຮັດໃຫ້ການຝາກຝັງນີ້ສຳເລັດລົງ. ມີພຽງແຕ່ເມື່ອນັ້ນ ເຂົາຈຶ່ງຈະເຊື່ອໃນພຣະເຈົ້າຢ່າງແທ້ຈິງ. ໃນປັດຈຸບັນນີ້ ສິ່ງທີ່ເຈົ້າປະຕິບັດໃນຄຣິສຕະຈັກນັ້ນ ແມ່ນການເຮັດໃຫ້ຄວາມຮັບຜິດຊອບຂອງເຈົ້າສຳເລັດບໍ? ສິ່ງນີ້ແມ່ນຂຶ້ນກັບວ່າເຈົ້າມີພາລະ ຫຼື ບໍ່ ແລະ ມັນຂຶ້ນກັບຄວາມຮູ້ຂອງເຈົ້າເອງ. ໃນການພະເຊີນກັບພາລະກິດນີ້, ຖ້າມະນຸດຖືກເອົາຊະນະ ແລະ ມີຄວາມຮູ້ທີ່ແທ້ຈິງ, ແລ້ວເຂົາກໍຈະສາມາດເຊື່ອຟັງໄດ້ ໂດຍບໍ່ຄຳນຶງເຖິງຄວາມຄາດຫວັງ ຫຼື ໂຊກຊະຕາຂອງເຂົາເອງ. ໃນວິທີນີ້, ພາລະກິດທີ່ຍິ່ງໃຫຍ່ຂອງພຣະເຈົ້າຈະຖືກເຮັດໃຫ້ເປັນຈິງທັງໝົດ, ຍ້ອນພວກເຈົ້າທຸກຄົນບໍ່ມີຄວາມສາມາດເໜືອສິ່ງນີ້ ແລະ ບໍ່ສາມາດບັນລຸຄວາມຮຽກຮ້ອງຕ້ອງການທີ່ສູງກວ່ານີ້. ແຕ່ໃນອະນາຄົດ, ບາງຄົນຈະຖືກເຮັດໃຫ້ສົມບູນ. ຄວາມສາມາດຂອງພວກເຂົາຈະພັດທະນາຂຶ້ນ, ໃນຈິດວິນຍານຂອງພວກເຂົາ ພວກເຂົາຈະມີຄວາມຮູ້ເລິກເຊິ່ງຍິ່ງຂຶ້ນ ແລະ ຊີວິດຂອງພວກເຂົາຈະເຕີບໃຫຍ່... ແຕ່ບາງຄົນກໍບໍ່ສາມາດບັນລຸສິ່ງນີ້ໄດ້ຢ່າງແທ້ຈິງ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ມັນມີເຫດຜົນທີ່ເຮົາເວົ້າວ່າ ເປັນຫຍັງພວກເຂົາຈຶ່ງບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ໃນອະນາຄົດ, ບາງຄົນຈະຖືກເອົາຊະນະ, ບາງຄົນຈະຖືກກຳຈັດ, ບາງຄົນຈະຖືກເຮັດໃຫ້ສົມບູນ ແລະ ບາງຄົນຈະຖືກໃຊ້ ແລະ ສະນັ້ນ ບາງຄົນຈະພະເຊີນກັບຄວາມລຳບາກຍາກແຄ້ນ, ບາງຄົນຈະພະເຊີນກັບການລົງໂທດ (ທັງໄພພິບັດທຳມະຊາດ ແລະ ຄວາມໂຊກຮ້າຍທີ່ເກີດຈາກມືຂອງມະນຸດ), ບາງຄົນຈະຖືກກຳຈັດ ແລະ ບາງຄົນຈະເອົາຕົວລອດ. ໃນສິ່ງນີ້ ແຕ່ລະຄົນຈະຖືກຈັດແບ່ງອອກຕາມປະເພດ ໂດຍແຕ່ລະກຸ່ມຈະເປັນຕົວແທນໃຫ້ກັບຄົນປະເພດໜຶ່ງ. ບໍ່ແມ່ນທຸກຄົນຈະຖືກກຳຈັດ ຫຼື ບໍ່ແມ່ນທຸກຄົນຈະຖືກເຮັດໃຫ້ສົມບູນ. ນີ້ແມ່ນຍ້ອນຄວາມສາມາດຂອງຄົນຈີນແມ່ນມີຕໍ່າຫຼາຍ ແລະ ມີພຽງຄົນຈຳນວນເລັກນ້ອຍເທົ່ານັ້ນໃນທ່າມກາງພວກເຂົາທີ່ມີຄວາມຮູ້ກ່ຽວກັບຕົນເອງສໍ່າທີ່ໂປໂລມີ. ໃນທ່າມກາງພວກເຈົ້າ, ມີໜ້ອຍຄົນທີ່ມີຄວາມຕັ້ງໃຈຈະຮັກພຣະເຈົ້າຄືກັບເປໂຕ ຫຼື ມີຄວາມເຊື່ອປະເພດດຽວກັນກັບໂຢບ. ເກືອບບໍ່ມີໃຜທ່າມກາງພວກເຈົ້າທີ່ຢຳເກງ ແລະ ຮັບໃຊ້ພຣະເຢໂຮວາຄືກັບເດວິດ ຜູ້ເຊິ່ງມີລະດັບຄວາມຈົງຮັກພັກດີຢ່າງສະໝໍ່າສະເໝີ. ພວກເຈົ້າຊ່າງເປັນຕາສົມເພດແທ້ເດ!

ໃນປັດຈຸບັນ, ການເວົ້າເຖິງການຖືກເຮັດໃຫ້ສົມບູນແມ່ນເປັນພຽງດ້ານໜຶ່ງ. ບໍ່ວ່າແມ່ນຫຍັງຈະເກີດຂຶ້ນກໍຕາມ, ພວກເຈົ້າຕ້ອງແບກຮັບເອົາຂັ້ນຕອນຂອງການເປັນພະຍານນີ້ຢ່າງຖືກຕ້ອງ. ຖ້າພວກເຈົ້າຖືກຮຽກຮ້ອງໃຫ້ຮັບໃຊ້ພຣະເຈົ້າໃນພຣະວິຫານ, ພວກເຈົ້າຈະເຮັດໄດ້ແນວໃດ? ຖ້າເຈົ້າບໍ່ແມ່ນປະໂລຫິດ ແລະ ບໍ່ໄດ້ມີສະຖານະຂອງບຸດຊາຍກົກ ຫຼື ບຸດຊາຍຂອງພຣະເຈົ້າ, ເຈົ້າຈະຍັງສາມາດຈົງຮັກພັກດີໄດ້ບໍ? ເຈົ້າຈະຍັງສາມາດສະຫຼະຄວາມພະຍາຍາມທັງໝົດຂອງເຈົ້າໃນພາລະກິດແຫ່ງການຂະຫຍາຍອານາຈັກໄດ້ບໍ? ເຈົ້າຈະຍັງສາມາດເຮັດພາລະກິດໃນການຝາກຝັງຂອງພຣະເຈົ້າໄດ້ຢ່າງຖືກຕ້ອງບໍ? ບໍ່ວ່າຊີວິດຂອງເຈົ້າຈະເຕີບໃຫຍ່ແບບໃດກໍຕາມ, ພາລະກິດໃນປັດຈຸບັນຈະເຮັດໃຫ້ເຈົ້າເຊື່ອໝັ້ນຢູ່ພາຍໃນໂດຍສິ້ນເຊີງ ແລະ ປ່ອຍວາງແນວຄິດທັງໝົດຂອງເຈົ້າ. ບໍ່ວ່າເຈົ້າມີສິ່ງທີ່ຕ້ອງມີເພື່ອ

ສະແຫວງຫາຊີວິດ ຫຼື ບໍ່, ພາລະກິດຂອງພຣະເຈົ້າຈະເຮັດໃຫ້ເຈົ້າເຊື່ອໝັ້ນໂດຍສິ້ນເຊີງ. ບາງຄົນເວົ້າວ່າ "ຂ້ານ້ອຍພຽງແຕ່ເຊື່ອໃນພຣະເຈົ້າ ແລະ ຂ້ານ້ອຍບໍ່ເຂົ້າໃຈວ່າການສະແຫວງຫາຊີວິດໝາຍເຖິງຫຍັງ". ແລ້ວບາງຄົນເວົ້າວ່າ "ຂ້ານ້ອຍສັບສົນໃນຄວາມເຊື່ອທີ່ຂ້ານ້ອຍມີໃນພຣະເຈົ້າ. ຂ້ານ້ອຍຮູ້ວ່າຂ້ານ້ອຍບໍ່ສາມາດຖືກເຮັດໃຫ້ສົມບູນໄດ້ ແລະ ດ້ວຍເຫດນັ້ນ ຂ້ານ້ອຍຈຶ່ງພ້ອມທີ່ຈະຖືກຂ້ຽນຕີ". ແມ່ນແຕ່ຄົນແບບນີ້ ຜູ້ເຊິ່ງພ້ອມທີ່ຈະຖືກຂ້ຽນຕີ ຫຼື ທຳລາຍ ກໍຍັງຕ້ອງຖືກເຮັດໃຫ້ຮັບຮູ້ວ່າ ພາລະກິດໃນປັດຈຸບັນແມ່ນຖືກປະຕິບັດໂດຍພຣະເຈົ້າ. ບາງຄົນຍັງເວົ້າວ່າ "ຂ້ານ້ອຍບໍ່ໄດ້ຂໍເພື່ອຖືກເຮັດໃຫ້ສົມບູນ, ແຕ່ໃນປັດຈຸບັນ ຂ້ານ້ອຍເຕັມໃຈຍອມຮັບການຝຶກຝົນທັງໝົດຂອງພຣະເຈົ້າ ແລະ ເຕັມໃຈທີ່ຈະດຳລົງຊີວິດຕາມຄວາມເປັນມະນຸດປົກກະຕິ, ພັດທະນາຄວາມສາມາດຂອງຂ້ານ້ອຍຂຶ້ນ ແລະ ເຊື່ອຟັງການຈັດແຈງທັງໝົດຂອງພຣະເຈົ້າ...". ໃນນີ້, ພວກເຂົາຍັງຖືກເອົາຊະນະ ແລະ ເປັນພະຍານເຊິ່ງພິສູດວ່າມີຄວາມຮູ້ບາງຢ່າງກ່ຽວກັບພາລະກິດຂອງພຣະເຈົ້າທີ່ຢູ່ພາຍໃນຜູ້ຄົນເຫຼົ່ານີ້. ຂັ້ນຕອນນີ້ໃນພາລະກິດແມ່ນຖືກປະຕິບັດຢ່າງໄວວາທີ່ສຸດ ແລະ ໃນອະນາຄົດ ມັນກໍຈະຖືກປະຕິບັດໃນຕ່າງຊາດຢ່າງໄວກວ່າເດີມ. ໃນປັດຈຸບັນ ຜູ້ຄົນທີ່ຢູ່ຕ່າງປະເທດເກືອບບໍ່ສາມາດລໍຖ້າໄດ້, ພວກເຂົາທຸກຄົນຟ້າວໄປທີ່ປະເທດຈີນ ແລະ ສະນັ້ນ ຖ້າພວກເຈົ້າບໍ່ສາມາດຖືກເຮັດໃຫ້ບໍລິບູນ, ພວກເຈົ້າກໍຈະຖ່ວງດຶງຄົນທີ່ຢູ່ຕ່າງປະເທດ. ໃນເວລານັ້ນ, ບໍ່ວ່າພວກເຈົ້າຈະເຂົ້າໄດ້ດີສໍ່າໃດ ຫຼື ພວກເຈົ້າຈະເປັນແນວໃດກໍຕາມ, ເມື່ອເວລາມາເຖິງ ພາລະກິດຂອງເຮົາກໍຈະສິ້ນສຸດລົງ ແລະ ຖືກເຮັດໃຫ້ສຳເລັດ. ພາລະກິດຂອງເຮົາຈະບໍ່ຖືກພວກເຈົ້າເຮັດໃຫ້ຊັກຊ້າ. ເຮົາປະຕິບັດພາລະກິດຂອງມະນຸດຊາດທັງປວງ ແລະ ບໍ່ຈຳເປັນຕ້ອງໃຫ້ເຮົາໃຊ້ເວລາກັບພວກເຈົ້າອີກຕໍ່ໄປ! ພວກເຈົ້າບໍ່ມີແຮງບັນດານໃຈຫຍັງເລີຍ, ຂາດຄວາມຮູ້ກ່ຽວກັບຕົນເອງເກີນໄປ! ພວກເຈົ້າບໍ່ເໝາະສົມແກ່ການຖືກເຮັດໃຫ້ສົມບູນ, ພວກເຈົ້າເກືອບຈະບໍ່ມີສັກກະຍາພາບຫຍັງເລີຍ! ໃນອະນາຄົດ, ເຖິງແມ່ນຜູ້ຄົນສືບຕໍ່ລະເລີຍ ແລະ ບໍ່ສົນໃຈ ແລະ ຍັງບໍ່ສາມາດພັດທະນາຄວາມສາມາດຂອງພວກເຂົາຂຶ້ນ, ສິ່ງນີ້ກໍຈະບໍ່ຂັດຂວາງພາລະກິດຂອງຈັກກະວານທັງປວງໄດ້ເລີຍ. ເມື່ອເຖິງເວລາທີ່ພາລະກິດຂອງພຣະເຈົ້າສຳເລັດ, ມັນກໍຈະສຳເລັດລົງ ແລະ ເມື່ອເຖິງເວລາທີ່ຜູ້ຄົນຖືກກຳຈັດ, ພວກເຂົາກໍຈະຖືກກຳຈັດ. ແນ່ນອນ ຄົນທີ່ຄວນຖືກເຮັດໃຫ້ສົມບູນ ແລະ ສົມຄວນຖືກເຮັດໃຫ້ສົມບູນກໍຈະຖືກເຮັດໃຫ້ສົມບູນ, ແຕ່ຖ້າພວກເຈົ້າບໍ່ມີຄວາມຫວັງແທ້ໆ, ແລ້ວພາລະກິດຂອງພຣະເຈົ້າກໍຈະບໍ່ລໍຖ້າພວກເຈົ້າ! ໃນທີ່ສຸດແລ້ວ ຖ້າເຈົ້າຖືກເອົາຊະນະ, ສິ່ງນີ້ກໍຍັງຈະສາມາດຖືກພິຈາລະນາໃຫ້ໄດ້ເປັນປະຈັກພະຍານ. ມີຂໍ້ຈຳກັດໃນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກພວກເຈົ້າ; ລະດັບຂອງວຸດທິພາວະຂອງມະນຸດຈະເປັນລະດັບຂອງຄຳພະຍານທີ່ຮຽກຮ້ອງຈາກເຂົາ. ມັນບໍ່ໄດ້ເປັນຄືກັບທີ່ມະນຸດຈິນຕະນາການໄວ້ວ່າຄຳພະຍານດັ່ງກ່າວຈະໄປເຖິງຂີດຈຳກັດສູງສຸດ ແລະ ມັນຈະກຶກກ້ອງໄປທົ່ວ, ບໍ່ມີທາງທີ່ສິ່ງນີ້ຈະສາມາດຖືກບັນລຸໄດ້ໃນປະຊາຊົນຈີນ. ເຮົາໄດ້ພົວພັນກັບພວກເຈົ້າຕະຫຼອດເວລາທັງໝົດນີ້ ແລະ ພວກເຈົ້າເອງກໍໄດ້ເຫັນສິ່ງນີ້: ເຮົາໄດ້ບອກພວກເຈົ້າບໍ່ໃຫ້ຕໍ່ຕ້ານ, ບໍ່ໃຫ້ກະບົດ, ບໍ່ໃຫ້ເຮັດສິ່ງຕ່າງໆທີ່ຂັດຂວາງ ຫຼື ທຳລາຍເມື່ອຢູ່ລັບຫຼັງເຮົາ. ເຮົາໄດ້ວິຈານຜູ້ຄົນໂດຍກົງກ່ຽວກັບສິ່ງນີ້ຫຼາຍຄັ້ງ, ແຕ່ເຖິງຢ່າງນັ້ນກໍບໍ່ພຽງພໍ, ໃນວິນາທີທີ່ພວກເຂົາຫັນຫຼັງກັບ ພວກເຂົາກໍປ່ຽນ

ໃນຂະນະທີ່ບາງຄົນຕໍ່ຕ້ານຢ່າງລັບໆ ໂດຍບໍ່ມີຄວາມຮູ້ສຶກສຳນຶກຜິດເລີຍ. ເຈົ້າຄິດວ່າເຮົາບໍ່ຮູ້ຈັກສິ່ງນີ້ບໍ? ເຈົ້າຄິດວ່າເຈົ້າສາມາດສ້າງບັນຫາໃຫ້ກັບເຮົາ ແລະ ຈະບໍ່ເກີດຫຍັງຂຶ້ນ ເນື່ອງຈາກສິ່ງນັ້ນບໍ? ເຈົ້າຄິດວ່າເຮົາບໍ່ຮູ້ບໍເມື່ອເຈົ້າພະຍາຍາມທຳລາຍພາລະກິດຂອງເຮົາລົງໃນເວລາຢູ່ລັບຫຼັງເຮົາ? ເຈົ້າຄິດວ່າກົນອຸບາຍເລັກນ້ອຍຂອງເຈົ້າຈະສາມາດແທນທີ່ບຸກຄະລິກຂອງເຈົ້າໄດ້ບໍ? ເຈົ້າເບິ່ງຄືວ່າເຊື່ອຟັງຢູ່ສະເໝີ ແຕ່ກໍທໍລະຍົດຢ່າງລັບໆ, ເຈົ້າເຊື່ອງຄວາມຄິດທີ່ຊົ່ວຮ້າຍໃນຫົວໃຈຂອງເຈົ້າ ແລະ ແມ່ນແຕ່ຄວາມຕາຍກໍບໍ່ແມ່ນການລົງໂທດທີ່ພຽງພໍສຳລັບຄົນແບບເຈົ້າ! ເຈົ້າຄິດວ່າພາລະກິດເລັກນ້ອຍບາງຢ່າງທີ່ພຣະວິນຍານບໍລິສຸດປະຕິບັດໃນເຈົ້າສາມາດແທນທີ່ການເຄົາລົບນັບຖືທີ່ເຈົ້າມີສຳລັບເຮົາບໍ? ເຈົ້າຄິດວ່າເຈົ້າໄດ້ຮັບແສງສະຫວ່າງຜ່ານການເອີ້ນຫາສະຫວັນບໍ? ເຈົ້າຊ່າງບໍ່ຮູ້ຈັກອາຍແທ້ເດ! ເຈົ້າເປັນຄົນໄຮ້ຄ່າຫຼາຍ! ເຈົ້າຄິດວ່າ "ການກະທຳອັນດີງາມ" ຂອງເຈົ້າກຳລັງໄປເຖິງສະຫວັນ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງມີຂໍ້ຍົກເວັ້ນ ແລະ ປະທານພອນສະຫວັນເລັກນ້ອຍໃຫ້ກັບເຈົ້າ ໂດຍເຮັດໃຫ້ເຈົ້າເວົ້າຢ່າງໂອຫານ, ປ່ອຍໃຫ້ເຈົ້າຫຼອກລວງຄົນອື່ນ ແລະ ຫຼອກລວງເຮົາບໍ? ເຈົ້າຊ່າງບໍ່ມີເຫດຜົນ! ເຈົ້າຮູ້ຈັກບໍວ່າສະຕິປັນຍາຂອງເຈົ້າມາຈາກໃສ? ເຈົ້າບໍ່ຮູ້ຈັກບໍວ່າເຈົ້າກິນອາຫານຂອງໃຜເພື່ອເຕີບໃຫຍ່? ເຈົ້າຊ່າງບໍ່ມີຄວາມສຳນຶກແທ້ໆ! ບາງຄົນທີ່ຢູ່ທ່າມກາງພວກເຈົ້າບໍ່ໄດ້ປ່ຽນແປງຫຍັງເລີຍຫຼັງຈາກເວລາສີ່ຫ້າປີທີ່ໄດ້ຖືກຈັດການ ແລະ ພວກເຈົ້າກໍຮູ້ແຈ້ງກ່ຽວກັບບັນຫາເຫຼົ່ານີ້. ພວກເຈົ້າຄວນຊັດເຈນກ່ຽວກັບທຳມະຊາດຂອງພວກເຈົ້າ ແລະ ບໍ່ຂັດຄ້ານເມື່ອເຈົ້າຖືກປະຖິ້ມໃນມື້ໜຶ່ງ. ບາງຄົນທີ່ຫຼອກລວງທັງຄົນທີ່ຢູ່ເບື້ອງເທິງ ແລະ ລຸ່ມພວກເຂົາໃນການຮັບໃຊ້ຂອງພວກເຂົາ ກໍຖືກຈັດການຫຼາຍ; ຍ້ອນບາງຄົນໂລບມາກຫາເງິນຄຳ ພວກເຂົາກໍຖືກຈັດການບໍ່ໜ້ອຍເຊັ່ນກັນ; ຍ້ອນບາງຄົນບໍ່ຮັກສາຂອບເຂດທີ່ຊັດເຈນລະຫວ່າງຜູ້ຊາຍ ແລະ ແມ່ຍິງ ພວກເຂົາຈຶ່ງຖືກຈັດການຢູ່ເລື້ອຍໆເຊັ່ນກັນ; ຍ້ອນບາງຄົນຂີ້ຄ້ານ ພວກເຂົາຈຶ່ງສົນໃຈພຽງແຕ່ເນື້ອໜັງ ແລະ ບໍ່ປະຕິບັດຕາມຫຼັກການເມື່ອພວກເຂົາຢ້ຽມຢາມຄຣິສຕະຈັກ, ພວກເຂົາຈຶ່ງຖືກຈັດການຢ່າງຫຼວງຫຼາຍ; ຍ້ອນບາງຄົນລົ້ມເຫຼວທີ່ຈະເປັນພະຍານໃນທຸກບ່ອນທີ່ພວກເຂົາໄປ, ເຮັດຕາມອຳເພີໃຈ ແລະ ຢ່າງບໍ່ລະມັດລະວັງ ແລະ ເຖິງກັບເຮັດບາບໂດຍຮູ້ຕົວ, ພວກເຂົາຈຶ່ງຖືກເຕືອນຫຼາຍຄັ້ງກ່ຽວກັບສິ່ງນີ້; ບາງຄົນພຽງແຕ່ສົນທະນາກ່ຽວກັບພຣະທຳ ແລະ ຄຳສັ່ງສອນໃນລະຫວ່າງການຊຸມນຸມ, ປະພຶດຕົວຢູ່ເໜືອຄົນອື່ນ, ບໍ່ມີຄວາມເປັນຈິງໃນຄວາມຈິງແມ່ນແຕ່ໜ້ອຍດຽວ ແລະ ວາງແຜນຕໍ່ຕ້ານ ແລະ ຍາດຊິງກັບອ້າຍເອື້ອຍນ້ອງຂອງພວກເຂົາ, ພວກເຂົາຈຶ່ງຖືກເປີດໂປງຢູ່ເລື້ອຍໆຍ້ອນສິ່ງນີ້. ເຮົາໄດ້ກ່າວພຣະທຳເຫຼົ່ານີ້ຕໍ່ພວກເຈົ້າຫຼາຍຄັ້ງ ແລະ ໃນປັດຈຸບັນ ເຮົາຈະບໍ່ກ່າວເຖິງສິ່ງນີ້ອີກ, ໃຫ້ເຮັດໃນສິ່ງທີ່ພວກເຈົ້າຕ້ອງການເຮັດ! ໃຫ້ຕັດສິນໃຈດ້ວຍຕົວເຈົ້າເອງ! ຫຼາຍຄົນບໍ່ໄດ້ຖືກຈັດການແບບນີ້ພຽງເວລາໜຶ່ງ ຫຼື ສອງປີ, ສຳລັບບາງຄົນ ມັນເປັນເວລາສາມ ຫຼື ສີ່ປີ ໃນຂະນະທີ່ບາງຄົນໄດ້ພະເຊີນສິ່ງນີ້ເປັນເວລາຫຼາຍກວ່າໜຶ່ງທົດສະວັດ, ໄດ້ຖືກຈັດການເມື່ອພວກເຂົາກາຍເປັນຜູ້ເຊື່ອ, ແຕ່ຈົນເຖິງປັດຈຸບັນ ກໍບໍ່ມີການປ່ຽນແປງຫຍັງເລີຍໃນພວກເຂົາ. ແລ້ວເຈົ້າຈະວ່າແນວໃດ, ເຈົ້າບໍ່ເປັນຄືກັບໝູບໍ? ເປັນໄປໄດ້ບໍວ່າ ພຣະເຈົ້າບໍ່ຍຸຕິທຳຕໍ່ເຈົ້າ? ຢ່າຄິດວ່າພາລະກິດຂອງພຣະເຈົ້າຈະບໍ່ສຳເລັດ ຖ້າພວກເຈົ້າບໍ່ສາມາດໄປເຖິງລະດັບໃດ

ໜຶ່ງ. ພຣະເຈົ້າຈະຍັງລໍຖ້າພວກເຈົ້າບໍ ຖ້າພວກເຈົ້າບໍ່ສາມາດບັນລຸເງື່ອນໄຂຂອງພຣະອົງໄດ້? ເຮົາບອກເຈົ້າຢ່າງແຈ່ມແຈ້ງເລີຍວ່າ ສິ່ງນີ້ບໍ່ແມ່ນຄວາມຈິງ. ຢ່າມີທັດສະນະທີ່ໂລກສວຍກ່ຽວກັບສິ່ງຕ່າງໆ! ມີເວລາຈຳກັດໃນພາລະກິດໃນປັດຈຸບັນ ແລະ ພຣະເຈົ້າບໍ່ໄດ້ເວົ້າຫຼິ້ນກັບເຈົ້າ! ເມື່ອກ່ອນ ເມື່ອເວົ້າເຖິງການຜະເຊີນກັບການທົດລອງຂອງຜູ້ເຮັດບໍລິການ, ຜູ້ຄົນຄິດວ່າຖ້າພວກເຂົາຕ້ອງຍຶດໝັ້ນໃນຄຳພະຍານຂອງພວກເຂົາຕໍ່ພຣະເຈົ້າ ແລະ ຖືກພຣະອົງເອົາຊະນະ, ພວກເຂົາກໍຕ້ອງໄປເຖິງຈຸດໃດໜຶ່ງ, ພວກເຂົາຕ້ອງເປັນຜູ້ເຮັດບໍລິການຢ່າງເຕັມໃຈ ແລະ ຢ່າງຊື່ນຊົມຍິນດີ ແລະ ພວກເຂົາຕ້ອງສັນລະເສີນພຣະເຈົ້າທຸກໆມື້ ແລະ ບໍ່ແມ່ນເຮັດຕາມອຳເພີໃຈ ຫຼື ເຮັດແບບບໍ່ໃສ່ໃຈແມ່ນແຕ່ໜ້ອຍດຽວ. ພວກເຂົາຄິດວ່າມີພຽງແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະເປັນຜູ້ເຮັດບໍລິການຢ່າງແທ້ຈິງ, ແຕ່ວ່າມັນແມ່ນແບບນັ້ນແທ້ບໍ? ໃນເວລານັ້ນ ຜູ້ຄົນຫຼາກຫຼາຍປະເພດຖືກເປີດໂປງ; ພວກເຂົາສະແດງພຶດຕິກຳທຸກລັກສະນະອອກມາ. ບາງຄົນກໍຕໍ່ວ່າ, ບາງຄົນກໍເຜີຍແຜ່ແນວຄິດ, ບາງຄົນກໍເຊົາເຂົ້າຮ່ວມການຊຸມນຸມ ແລະ ບາງຄົນເຖິງກັບແຈກຢາຍເງິນຂອງຄຣິສຕະຈັກ. ອ້າຍເອື້ອຍນ້ອງກຳລັງຂັດແຍ້ງກັນ. ມັນເປັນການເປີດແອກຄັ້ງໃຫຍ່, ແຕ່ມີສິ່ງໜຶ່ງທີ່ດີກ່ຽວກັບມັນ: ບໍ່ມີໃຜຍອມໃຜ. ສິ່ງນີ້ເປັນຈຸດທີ່ເຂັ້ມແຂງທີ່ສຸດ. ຍ້ອນສິ່ງນີ້ພວກເຂົາໄດ້ແບກຮັບເອົາຂັ້ນຕອນຂອງຄຳພະຍານຕໍ່ໜ້າຊາຕານ ແລະ ຫຼັງຈາກນັ້ນ ກໍໄດ້ຮັບຕົວຕົນຂອງຄົນຂອງພຣະເຈົ້າ ແລະ ລອດມາຮອດທຸດມື້ນີ້. ພາລະກິດຂອງພຣະເຈົ້າບໍ່ໄດ້ຖືກປະຕິບັດຕາມທີ່ເຈົ້າຈິນຕະນາການ, ກົງກັນຂ້າມ ເມື່ອໝົດເວລາ, ພາລະກິດກໍຈະສິ້ນສຸດ, ບໍ່ວ່າເຈົ້າໄດ້ໄປເຖິງຈຸດໃດແລ້ວກໍຕາມ. ບາງຄົນອາດເວົ້າວ່າ “ໂດຍການປະພຶດແບບນີ້ ພຣະອົງບໍ່ຊ່ວຍຜູ້ຄົນໃຫ້ລອດພົ້ນ ຫຼື ຮັກພວກເຂົາ, ພຣະອົງບໍ່ແມ່ນພຣະເຈົ້າທີ່ຊອບທຳ”. ເຮົາບອກກັບເຈົ້າຢ່າງແຈ່ມແຈ້ງວ່າ: ຫົວໃຈຂອງພາລະກິດຂອງເຮົາໃນປັດຈຸບັນແມ່ນການເອົາຊະນະເຈົ້າ ແລະ ເຮັດໃຫ້ເຈົ້າເປັນພະຍານ. ການຊ່ວຍເຈົ້າໃຫ້ລອດພົ້ນເປັນພຽງແຕ່ສ່ວນປະກອບ; ບໍ່ວ່າເຈົ້າສາມາດຖືກຊ່ວຍໃຫ້ລອດພົ້ນ ຫຼື ບໍ່ແມ່ນຂຶ້ນກັບການສະແຫວງຫາຂອງເຈົ້າເອງ ແລະ ບໍ່ໄດ້ກ່ຽວຫຍັງກັບເຮົາ. ແຕ່ເຮົາຕ້ອງເອົາຊະນະເຈົ້າ; ຢ່າພະຍາຍາມຈູງດັງເຮົາເລີຍ, ໃນປັດຈຸບັນ ເຮົາປະຕິບັດພາລະກິດ ແລະ ຊ່ວຍໃຫ້ເຈົ້າລອດພົ້ນ, ບໍ່ແມ່ນໃນທາງກົງກັນຂ້າມ.

ໃນປັດຈຸບັນນີ້, ສິ່ງທີ່ພວກເຈົ້າໄດ້ເຂົ້າໃຈແມ່ນສູງສົ່ງກວ່າບຸກຄົນໃດໜຶ່ງທົ່ວທັງປະຫວັດສາດ ຜູ້ທີ່ບໍ່ໄດ້ຖືກເຮັດໃຫ້ສົມບູນ. ບໍ່ວ່າຈະເປັນຄວາມຮູ້ກ່ຽວກັບການທົດລອງຂອງພວກເຈົ້າ ຫຼື ຄວາມເຊື່ອໃນພຣະເຈົ້າ, ມັນກໍລ້ວນແລ້ວແຕ່ສູງສົ່ງກວ່າຂອງຜູ້ເຊື່ອຄົນອື່ນໃນພຣະເຈົ້າ. ສິ່ງຕ່າງໆທີ່ພວກເຈົ້າເຂົ້າໃຈແມ່ນສິ່ງທີ່ພວກເຈົ້າໄດ້ຮູ້ຈັກກ່ອນທີ່ພວກເຈົ້າຈະຜະເຊີນກັບການທົດລອງຈາກສິ່ງແວດລ້ອມ, ແຕ່ວຸດທິພາວະທີ່ແທ້ຈິງຂອງພວກເຈົ້າບໍ່ສາມາດເຂົ້າກັບສິ່ງເຫຼົ່ານັ້ນໄດ້ຢ່າງສົມບູນ. ສິ່ງທີ່ພວກເຈົ້າຮູ້ແມ່ນສູງສົ່ງກວ່າສິ່ງທີ່ພວກເຈົ້ານຳເຂົ້າສູ່ການປະຕິບັດ. ເຖິງແມ່ນພວກເຈົ້າເວົ້າວ່າຜູ້ຄົນທີ່ເຊື່ອໃນພຣະເຈົ້າຄວນຮັກພຣະເຈົ້າ ແລະ ບໍ່ຄວນດີ້ນຣົນພະຍາຍາມຫາພອນ ແຕ່ເພື່ອບັນລຸຄວາມປະສົງຂອງພຣະເຈົ້າເທົ່ານັ້ນ, ສິ່ງທີ່ສະແດງອອກໃນຊີວິດຂອງພວກເຈົ້າແມ່ນໄກຈາກສິ່ງນີ້ຫຼາຍ ແລະ ເປິເປື້ອນຫຼາຍ. ຄົນສ່ວນໃຫຍ່ເຊື່ອໃນພຣະເຈົ້າຍ້ອນເຫັນແກ່ສັນຕິສຸກ ແລະ ຜົນປະໂຫຍດຢ່າງອື່ນ. ເຈົ້າຈະບໍ່

ເຊື່ອໃນພຣະເຈົ້າ ຖ້າມັນບໍ່ແມ່ນຍ້ອນຜົນປະໂຫຍດຂອງເຈົ້າ ແລະ ຖ້າເຈົ້າບໍ່ສາມາດຮັບເອົາຄວາມກະລຸນາຂອງພຣະເຈົ້າໄດ້, ເຈົ້າກໍນ້ອຍໃຈ. ສິ່ງທີ່ເຈົ້າເວົ້າຈະເປັນວຸດທິພາວະທີ່ແທ້ຈິງຂອງເຈົ້າໄດ້ແນວໃດ? ເມື່ອມີເຫດການໃນຄອບຄົວທີ່ບໍ່ສາມາດຫຼີກເວັ້ນໄດ້ເກີດຂຶ້ນ ເຊັ່ນ: ລູກໆບໍ່ສະບາຍ, ຄົນຮັກເຂົ້າໂຮງໝໍ, ຜົດຜົນຜະລິດໄດ້ໜ້ອຍ ແລະ ການຂົ່ມເຫັງໂດຍສະມາຊິກຄອບຄົວ, ແມ່ນແຕ່ບັນຫາທີ່ເກີດຂຶ້ນເລື້ອຍໆ ແລະ ເປັນປະຈຳເຫຼົ່ານີ້ກໍໜັກເກີນໄປສຳລັບເຈົ້າແລ້ວ. ເມື່ອສິ່ງດັ່ງກ່າວເກີດຂຶ້ນ, ເຈົ້າກໍຕື່ນຕົກໃຈ, ເຈົ້າບໍ່ຮູ້ຈັກວ່າຈະເຮັດຫຍັງຕໍ່ ແລະ ສ່ວນໃຫຍ່ແລ້ວ ເຈົ້າຈະຕໍ່ວ່າພຣະເຈົ້າ. ເຈົ້າຕໍ່ວ່າໆ ພຣະທຳຂອງພຣະເຈົ້າລໍ້ລວງເຈົ້າ, ພາລະກິດຂອງພຣະເຈົ້າເຍາະເຍີ້ຍເຈົ້າ. ພວກເຈົ້າບໍ່ໄດ້ມີຄວາມຄິດແບບນັ້ນບໍ? ເຈົ້າຄິດວ່າສິ່ງດັ່ງກ່າວບໍ່ຄ່ອຍເກີດຂຶ້ນທ່າມກາງພວກເຈົ້າບໍ? ພວກເຈົ້າໃຊ້ເວລາທຸກມື້ເພື່ອດຳລົງຊີວິດໃນທ່າມກາງເຫດການດັ່ງກ່າວ. ເຈົ້າບໍ່ໃສ່ໃຈໃນຄວາມສຳເລັດຂອງຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າແມ່ນແຕ່ໜ້ອຍດຽວ ແລະ ໃສ່ໃຈໃນວິທີທີ່ຈະບັນລຸຄວາມປະສົງຂອງພຣະເຈົ້າ. ວຸດທິພາວະທີ່ແທ້ຈິງຂອງພວກເຈົ້າແມ່ນຕໍ່າຫຼາຍ, ຕໍ່າກວ່າວຸດທິພາວະຂອງໄກ່ນ້ອຍອີກ. ເມື່ອທຸລະກິດຄອບຄົວຂອງເຈົ້າສູນເສຍເງິນ ເຈົ້າກໍຕໍ່ວ່າພຣະເຈົ້າ, ເມື່ອເຈົ້າພົບວ່າຕົນເອງຕົກຢູ່ໃນສະພາບແວດລ້ອມທີ່ບໍ່ມີການປົກປ້ອງຂອງພຣະເຈົ້າ ເຈົ້າກໍຍັງຕໍ່ວ່າພຣະເຈົ້າ ແລະ ເຈົ້າຕໍ່ວ່າແມ່ນແຕ່ເມື່ອໄກ່ນ້ອຍໂຕໜຶ່ງຂອງເຈົ້າຕາຍ ຫຼື ງົວເຖົ້າທີ່ຢູ່ໃນຄອກຂອງເຈົ້າລົ້ມປ່ວຍ. ເຈົ້າຕໍ່ວ່າເມື່ອເຖິງເວລາທີ່ລູກຊາຍຂອງເຈົ້າຈະແຕ່ງງານ ແຕ່ຄອບຄົວຂອງເຈົ້າບໍ່ມີເງິນພໍ; ເຈົ້າຕ້ອງການເຮັດໜ້າທີ່ເປັນເຈົ້າພາບ ແຕ່ບໍ່ສາມາດຈ່າຍມັນໄດ້ ແລະ ຫຼັງຈາກນັ້ນ ເຈົ້າກໍຍັງຕໍ່ວ່າ. ເຈົ້າເຕັມລົ້ນໄປດ້ວຍຄຳຕໍ່ວ່າ ແລະ ບາງຄັ້ງ ຍ້ອນສິ່ງນີ້ ເຈົ້າຈຶ່ງບໍ່ໄດ້ເຂົ້າຮ່ວມການຊຸມນຸມ ຫຼື ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ບາງເທື່ອກໍຄິດລົບເປັນເວລາຍາວນານ. ບໍ່ມີຫຍັງທີ່ເກີດຂຶ້ນກັບເຈົ້າໃນມື້ນີ້ກ່ຽວຂ້ອງກັບຄວາມຄາດຫວັງ ຫຼື ຊະຕາກຳຂອງເຈົ້າເລີຍ; ສິ່ງເຫຼົ່ານີ້ຈະຍັງເກີດຂຶ້ນເຖິງແມ່ນເຈົ້າບໍ່ໄດ້ເຊື່ອໃນພຣະເຈົ້າ, ແຕ່ໃນປັດຈຸບັນເຈົ້າໄດ້ສົ່ງມອບຄວາມຮັບຜິດຊອບນັ້ນໃຫ້ກັບພຣະເຈົ້າ ແລະ ສືບຕໍ່ເວົ້າວ່າພຣະເຈົ້າໄດ້ກຳຈັດເຈົ້າອອກແລ້ວ. ຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າເດ? ເຈົ້າໄດ້ຖວາຍຊີວິດຂອງເຈົ້າຢ່າງແທ້ຈິງບໍ? ຖ້າພວກເຈົ້າໄດ້ປະສົບກັບການທົດລອງແບບດຽວກັນກັບໂຢບ, ບໍ່ມີໃຜທ່າມກາງພວກເຈົ້າທີ່ຕິດຕາມພຣະເຈົ້າໃນປັດຈຸບັນຈະສາມາດຕັ້ງໝັ້ນໄດ້, ພວກເຈົ້າທຸກຄົນຈະລົ້ມລົງ. ນັ້ນຄືໂລກທີ່ແຕກຕ່າງກັນພໍສົມຄວນລະຫວ່າງພວກເຈົ້າ ແລະ ໂຢບ. ໃນປັດຈຸບັນ ຖ້າເຄິ່ງໜຶ່ງຂອງຊັບສິນຂອງພວກເຈົ້າຖືກຍຶດ ພວກເຈົ້າກໍຈະປະຕິເສດການເປັນຢູ່ຂອງພຣະເຈົ້າ; ຖ້າລູກຊາຍ ຫຼື ລູກສາວຂອງພວກເຈົ້າຖືກລັກພາຕົວໄປຈາກພວກເຈົ້າ, ພວກເຈົ້າກໍຈະແລ່ນຮ້ອງໄຫ້ໂອຍວາຍໄປຕາມຖະໜົນ; ຖ້າຫົນທາງດຽວໃນການຫາລ້ຽງຊີບຂອງເຈົ້າສິ້ນສຸດລົງ, ເຈົ້າກໍຈະພະຍາຍາມ ແລະ ນຳມັນມາລົມກັບພຣະເຈົ້າ; ເຈົ້າຈະຖາມວ່າ ເປັນຫຍັງເຮົາຈຶ່ງກ່າວພຣະທຳຫຼາຍຂໍ້ໃນເບື້ອງຕົ້ນເພື່ອເຮັດໃຫ້ເຈົ້າຢ້ານກົວ. ບໍ່ມີຫຍັງທີ່ພວກເຈົ້າຈະບໍ່ກ້າເຮັດໃນເວລາດັ່ງກ່າວ. ສິ່ງນີ້ສະແດງໃຫ້ເຫັນວ່າ ພວກເຈົ້າບໍ່ໄດ້ຮັບຄວາມເຂົ້າໃຈຢ່າງແທ້ຈິງເລີຍ ແລະ ບໍ່ມີວຸດທິພາວະທີ່ແທ້ຈິງ. ສະນັ້ນ ການທົດລອງໃນຕົວພວກເຈົ້າຈຶ່ງໜັກເກີນໄປ, ຍ້ອນພວກເຈົ້າຮູ້ຫຼາຍເກີນໄປ, ແຕ່ສິ່ງທີ່ພວກເຈົ້າເຂົ້າໃຈແທ້ໆນັ້ນ ບໍ່ມີຮອດໜຶ່ງສ່ວນພັນຂອງສິ່ງທີ່ພວກເຈົ້າຮູ້ເລີຍ.

ຈິ່ງຢ່າຢຸດຢູ່ທີ່ຄວາມເຂົ້າໃຈ ແລະ ຄວາມຮູ້ເທົ່ານັ້ນ; ມັນຈະດີທີ່ສຸດຖ້າເຈົ້າຕ້ອງເບິ່ງວ່າເຈົ້າສາມາດນຳເຂົ້າສູ່ການປະຕິບັດຢ່າງແທ້ຈິງໄດ້ຫຼາຍສໍ່າໃດ, ໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດຜ່ານເຫື່ອແຮງ ແລະ ການເຮັດວຽກໜັກຂອງເຈົ້າເອງຫຼາຍສໍ່າໃດ ແລະ ມີການປະຕິບັດຫຼາຍສໍ່າໃດຂອງເຈົ້າທີ່ເຮັດໃຫ້ເຈົ້າໄດ້ຮູ້ເຖິງຄວາມຕັ້ງໃຈຂອງເຈົ້າເອງ. ເຈົ້າຄວນຈິງຈັງກັບວຸດທິພາວະ ແລະ ປະຕິບັດຢ່າງຈິງຈັງ. ໃນຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າ, ເຈົ້າບໍ່ຄວນພະຍາຍາມທຳທ່າເຮັດພຽງເພື່ອຄົນອື່ນເທົ່ານັ້ນ, ເຈົ້າຈະສາມາດຮັບເອົາຄວາມຈິງ ແລະ ຊີວິດ ຫຼື ບໍ່ ແມ່ນຂຶ້ນຢູ່ກັບການສະແຫວງຫາຂອງເຈົ້າເອງ.

# ການປະຕິບັດ (4)

ສັນຕິສຸກ ແລະ ຄວາມປິຕິຍິນດີທີ່ເຮົາກ່າວເຖິງໃນປັດຈຸບັນບໍ່ຄືກັນກັບສິ່ງທີ່ເຈົ້າເຊື່ອ ແລະ ເຂົ້າໃຈ. ເຈົ້າເຄີຍຄິດວ່າສັນຕິສຸກ ແລະ ຄວາມປິຕິຍິນດີໝາຍເຖິງການມີຄວາມສຸກໝົດມື້, ການປາສະຈາກພະຍາດ ຫຼື ຄວາມໂຊກຮ້າຍໃນຄອບຄົວຂອງເຈົ້າ, ການເພິ່ງພໍໃຈຢູ່ສະເໝີໂດຍບໍ່ມີຄວາມຮູ້ສຶກໂສກເສົ້າແມ່ນແຕ່ໜ້ອຍດຽວ ແລະ ການມີຄວາມຮູ້ສຶກປິຕິຍິນດີຢ່າງໄຮ້ຄຳບັນຍາຍ ບໍ່ວ່າຊີວິດຂອງເຈົ້າໄດ້ພັດທະນາໄປຮອດລະດັບໃດແລ້ວກໍຕາມ. ນັ້ນແມ່ນນອກຈາກການຂຶ້ນເງິນເດືອນ ແລະ ການທີ່ລູກຊາຍຂອງເຈົ້າເຂົ້າມະຫາວິທະຍາໄລ. ໂດຍທີ່ມີສິ່ງເຫຼົ່ານີ້ຢູ່ໃນຄວາມຄິດ, ເຈົ້າຈຶ່ງອະທິຖານຫາພຣະເຈົ້າ ແລະ ເມື່ອເຫັນວ່າຄວາມກະລຸນາຂອງພຣະອົງຍິ່ງໃຫຍ່ຫຼາຍ, ເຈົ້າກໍດີໃຈຫຼາຍ, ຍິ້ມຈົນປາກຈີກໄປເຖິງຫູ ແລະ ບໍ່ສາມາດຢຸດຂອບໃຈພຣະເຈົ້າໄດ້. ສັນຕິສຸກ ແລະ ຄວາມປິຕິຍິນດີດັ່ງກ່າວບໍ່ແມ່ນສັນຕິສຸກ ແລະ ຄວາມປິຕິຍິນດີຢ່າງແທ້ຈິງທີ່ມາພ້ອມກັບການສະຖິດຂອງພຣະວິນຍານບໍລິສຸດ. ກົງກັນຂ້າມ, ມັນຄືສັນຕິສຸກ ແລະ ຄວາມປິຕິຍິນດີທີ່ເປັນຜົນມາຈາກຄວາມພໍໃຈຂອງເນື້ອໜັງ. ເຈົ້າຄວນເຂົ້າໃຈວ່າມັນແມ່ນຍຸກໃດໃນປັດຈຸບັນ; ມັນບໍ່ແມ່ນຍຸກແຫ່ງພຣະຄຸນ ແລະ ມັນບໍ່ແມ່ນເວລາທີ່ເຈົ້າຈະສະແຫວງຫາເພື່ອເຮັດໃຫ້ທ້ອງຂອງເຈົ້າອີ່ມໄປດ້ວຍເຂົ້າຈີ່ອີກແລ້ວ. ເຈົ້າອາດເບີກບານໃຈ ຍ້ອນທຸກສິ່ງເປັນໄປດ້ວຍດີກັບຄອບຄົວຂອງເຈົ້າ, ແຕ່ຊີວິດຂອງເຈົ້າແມ່ນຫັນໃຈຫອບເປັນຄັ້ງສຸດທ້າຍ ແລະ ສະນັ້ນ ບໍ່ວ່າຄວາມປິຕິຍິນດີຂອງເຈົ້າຈະມີຫຼາຍສໍ່າໃດກໍຕາມ, ພຣະວິນຍານບໍລິສຸດກໍບໍ່ໄດ້ຢູ່ກັບເຈົ້າ. ການໄດ້ຮັບເອົາການສະຖິດຂອງພຣະວິນຍານບໍລິສຸດແມ່ນເລື່ອງງ່າຍ: ໃຫ້ເຮັດໃນສິ່ງທີ່ເຈົ້າຄວນເຮັດຢ່າງເໝາະສົມ, ປະຕິບັດໜ້າທີ່ ແລະ ບົດບາດຂອງມະນຸດເປັນຢ່າງດີ ແລະ ສາມາດປະກອບຕົວເຈົ້າເອງດ້ວຍສິ່ງຕ່າງໆທີ່ເຈົ້າຈຳເປັນເພື່ອທົດແທນຂໍ້ບົກຜ່ອງຂອງເຈົ້າ. ຖ້າເຈົ້າມີພາລະຕໍ່ຊີວິດຂອງເຈົ້າເອງຢູ່ສະເໝີ ແລະ ມີຄວາມສຸກເພາະເຈົ້າໄດ້ຮັບຮູ້ຄວາມຈິງ ແລະ ເຂົ້າໃຈພາລະກິດໃນປັດຈຸບັນຂອງພຣະເຈົ້າ, ນັ້ນຄືການສະຖິດຂອງພຣະວິນຍານບໍລິສຸດຢ່າງແທ້ຈິງ. ຫຼື ບາງຄັ້ງ ຖ້າເຈົ້າຕົກຢູ່ໃນຄວາມກັງວົນ ເພາະເຈົ້າຜະເຊີນກັບບັນຫາທີ່ເຈົ້າບໍ່ຮູ້ວິທີທີ່ຈະຜ່ານພົ້ນມັນໄປໄດ້ ຫຼື ເພາະເຈົ້າບໍ່ເຂົ້າໃຈຄວາມຈິງທີ່ກຳລັງຖືກສົນທະນາ, ສິ່ງນີ້ກໍພິສູດວ່າພຣະວິນຍານບໍລິສຸດຢູ່ກັບເຈົ້າແລ້ວ. ສິ່ງເຫຼົ່ານີ້ເປັນສະພາວະປົກກະຕິຂອງປະສົບການຊີວິດ. ເຈົ້າຕ້ອງເຂົ້າໃຈຄວາມແຕກຕ່າງລະຫວ່າງການມີ ແລະ ການປາສະຈາກການສະຖິດຂອງພຣະວິນຍານບໍລິສຸດ ແລະ ຕ້ອງບໍ່ມັກງ່າຍເກີນໄປໃນມຸມມອງຂອງເຈົ້າກ່ຽວກັບສິ່ງນີ້.

ກ່ອນໜ້ານີ້, ມີການເວົ້າວ່າ ການສະຖິດຂອງພຣະວິນຍານບໍລິສຸດ ແລະ ການມີພາລະກິດຂອງພຣະວິນຍານບໍລິສຸດແມ່ນແຕກຕ່າງກັນ. ສະພາວະປົກກະຕິຂອງການມີພຣະວິນຍານບໍລິສຸດສະຖິດຢູ່ແມ່ນສະແດງອອກຢູ່ໃນການມີຄວາມຄິດທີ່ປົກກະຕິ, ເຫດຜົນທີ່ປົກກະຕິ ແລະ ຄວາມເປັນມະນຸດທີ່ປົກກະຕິ. ບຸກຄະລິກຂອງຄົນອາດຈະເປັນດັ່ງທີ່ເຄີຍເປັນ, ແຕ່ພາຍໃນຕົວພວກເຂົາແມ່ນຈະມີສັນຕິສຸກ ແລະ ດ້ານພາຍນອກ ພວກເຂົາກໍຈະມີຄຸນສົມບັດຂອງໄພ່ພົນ. ນີ້ແມ່ນສິ່ງທີ່ພວກເຂົາຈະເປັນ ເມື່ອ

ພຣະວິນຍານບໍລິສຸດຢູ່ກັບພວກເຂົາ. ເມື່ອບາງຄົນມີການສະຖິດຂອງພຣະວິນຍານບໍລິສຸດ, ແນວຄວາມຄິດຂອງພວກເຂົາກໍປົກກະຕິ. ເມື່ອພວກເຂົາຫິວ ພວກເຂົາກໍຕ້ອງການກິນ, ເມື່ອພວກເຂົາກະຫາຍ ພວກເຂົາກໍຕ້ອງການດື່ມນໍ້າ... ການສະແດງອອກດັ່ງກ່າວຂອງການເປັນມະນຸດປົກກະຕິບໍ່ແມ່ນການໄດ້ຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດ; ພວກມັນແມ່ນການຄິດແບບປົກກະຕິຂອງຜູ້ຄົນ ແລະ ສະພາວະທຳມະດາໃນການມີພຣະວິນຍານບໍລິສຸດສະຖິດຢູ່. ບາງຄົນເຊື່ອຢ່າງຜິດໆວ່າຄົນທີ່ມີການສະຖິດຂອງພຣະວິນຍານບໍລິສຸດແມ່ນບໍ່ຮູ້ຈັກອຶດຫິວອີກຕໍ່ໄປ, ພວກເຂົາບໍ່ຮູ້ສຶກອິດເມື່ອຍ ແລະ ເບິ່ງຄືກັບວ່າ ພວກເຂົາບໍ່ຄິດກັບຄອບຄົວ ແລະ ເກືອບແຍກຕົນເອງອອກຈາກເນື້ອໜັງຢ່າງສົມບູນ. ໃນຄວາມເປັນຈິງແລ້ວ ຍິ່ງພຣະວິນຍານບໍລິສຸດຢູ່ກັບຜູ້ຄົນຫຼາຍສໍ່າໃດ, ພວກເຂົາກໍປົກກະຕິຫຼາຍສໍ່ານັ້ນ. ພວກເຂົາຮູ້ຈັກທົນທຸກ ແລະ ສະຫຼະສິ່ງຕ່າງໆເພື່ອພຣະເຈົ້າ, ເສຍສະຫຼະຕົນເອງໃຫ້ກັບພຣະເຈົ້າ ແລະ ຈົງຮັກພັກດີຕໍ່ພຣະເຈົ້າ; ຍິ່ງໄປກວ່ານັ້ນ ພວກເຂົາຄິດກ່ຽວກັບອາຫານ ແລະ ເຄື່ອງນຸ່ງຫົ່ມ. ເວົ້າອີກຢ່າງໜຶ່ງກໍຄື ພວກເຂົາບໍ່ໄດ້ສູນເສຍຫຍັງຈາກຄວາມເປັນມະນຸດປົກກະຕິທີ່ຜູ້ຄົນຄວນມີ ແລະ ເປັນ, ແຕ່ກົງກັນຂ້າມ ພວກເຂົາມີເຫດຜົນໂດຍສະເພາະ. ບາງຄັ້ງ ພວກເຂົາອ່ານພຣະທຳຂອງພຣະເຈົ້າ ແລະ ໄຕ່ຕອງພາລະກິດຂອງພຣະເຈົ້າ; ມີຄວາມເຊື່ອຢູ່ໃນຫົວໃຈຂອງພວກເຂົາ ແລະ ພວກເຂົາເຕັມໃຈທີ່ຈະສະແຫວງຫາຄວາມຈິງ. ໂດຍທຳມະຊາດແລ້ວ, ພາລະກິດຂອງພຣະວິນຍານບໍລິສຸດແມ່ນອີງຕາມພື້ນຖານນີ້. ຖ້າຜູ້ຄົນປາສະຈາກການຄິດແບບປົກກະຕິ, ແລ້ວພວກເຂົາກໍຈະບໍ່ມີເຫດຜົນ, ນີ້ບໍ່ແມ່ນສະພາວະປົກກະຕິ. ເມື່ອຜູ້ຄົນມີການຄິດແບບປົກກະຕິ ແລະ ພຣະວິນຍານບໍລິສຸດກໍຢູ່ກັບພວກເຂົາ, ພວກເຂົາຈະມີເຫດຜົນແບບຄົນປົກກະຕິຢ່າງແນ່ນອນ ແລະ ດ້ວຍເຫດນັ້ນ ພວກເຂົາແມ່ນໄດ້ມີສະພາວະທີ່ປົກກະຕິ. ການປະສົບກັບພາລະກິດຂອງພຣະເຈົ້າ, ການມີພາລະກິດຂອງພຣະວິນຍານບໍລິສຸດແມ່ນເກີດຂຶ້ນເປັນບາງຄັ້ງບາງຄາວ, ໃນຂະນະທີ່ການມີພຣະວິນຍານບໍລິສຸດສະຖິດຢູ່ແມ່ນເກີດຂຶ້ນເກືອບຕະຫຼອດເວລາ. ຕາບໃດທີ່ເຫດຜົນ ແລະ ຄວາມຄິດຂອງຜູ້ຄົນເປັນປົກກະຕິ ແລະ ຕາບໃດທີ່ສະພາວະຂອງພວກເຂົາເປັນປົກກະຕິ, ແລ້ວພຣະວິນຍານບໍລິສຸດກໍຢູ່ກັບພວກເຂົາຢ່າງແນ່ນອນ. ເມື່ອເຫດຜົນ ແລະ ຄວາມຄິດຂອງຜູ້ຄົນບໍ່ປົກກະຕິ, ຄວາມເປັນມະນຸດຂອງພວກເຂົາກໍບໍ່ປົກກະຕິ. ຖ້າໃນຊ່ວງເວລານີ້, ພາລະກິດຂອງພຣະວິນຍານບໍລິສຸດຢູ່ໃນເຈົ້າ, ແລ້ວພຣະວິນຍານບໍລິສຸດກໍຈະຢູ່ກັບເຈົ້າຢ່າງແນ່ນອນ. ແຕ່ຖ້າພຣະວິນຍານບໍລິສຸດຢູ່ກັບເຈົ້າ, ນັ້ນບໍ່ໄດ້ໝາຍຄວາມວ່າພຣະວິນຍານບໍລິສຸດປະຕິບັດພາລະກິດພາຍໃນຕົວເຈົ້າຢ່າງແນ່ນອນ, ຍ້ອນວ່າ ພຣະວິນຍານບໍລິສຸດປະຕິບັດພາລະກິດໃນເວລາພິເສດ. ການສະຖິດຂອງພຣະວິນຍານບໍລິສຸດພຽງແຕ່ສາມາດຮັກສາການເປັນຢູ່ປົກກະຕິຂອງຜູ້ຄົນ, ແຕ່ພຣະວິນຍານບໍລິສຸດແມ່ນປະຕິບັດພາລະກິດໃນເວລາຕ່າງຫາກ. ຕົວຢ່າງ ເຊັ່ນ: ຖ້າເຈົ້າເປັນຜູ້ນຳ ຫຼື ຜູ້ເຮັດວຽກ, ເມື່ອເຈົ້າຫົດນໍ້າ ແລະ ຈັດການລ້ຽງດູໃຫ້ກັບຄຣິສຕະຈັກ, ແລ້ວພຣະວິນຍານບໍລິສຸດກໍຈະໃຫ້ແສງສະຫວ່າງກັບເຈົ້າດ້ວຍພຣະທຳບາງຂໍ້ເພື່ອສັ່ງສອນຄົນອື່ນ ແລະ ສາມາດແກ້ໄຂບັນຫາຕົວຈິງບາງຢ່າງຂອງອ້າຍເອື້ອຍນ້ອງຂອງເຈົ້າ, ເຊິ່ງໃນເວລາດັ່ງກ່າວ ພຣະວິນຍານບໍລິສຸດແມ່ນກຳລັງປະຕິບັດພາລະກິດ. ບາງຄັ້ງ ເມື່ອເຈົ້າກຳລັງກິນ ແລະ ດື່ມ

ພຣະທຳຂອງພຣະເຈົ້າ, ພຣະວິນຍານບໍລິສຸດແມ່ນໃຫ້ແສງສະຫວ່າງກັບເຈົ້າດ້ວຍພຣະທຳບາງຂໍ້ທີ່ກ່ຽວຂ້ອງກັບປະສົບການຂອງເຈົ້າເອງໂດຍສະເພາະ, ເຮັດໃຫ້ເຈົ້າໄດ້ຮັບເອົາຄວາມຮູ້ກ່ຽວກັບສະພາວະຂອງເຈົ້າເອງຫຼາຍຂຶ້ນ; ສິ່ງນີ້ແມ່ນພາລະກິດຂອງພຣະວິນຍານບໍລິສຸດເຊັ່ນກັນ. ບາງຄັ້ງ ເມື່ອເຮົາເວົ້າ ພວກເຈົ້າກໍຟັງ ແລະ ສາມາດວັດແທກສະພາວະຂອງພວກເຈົ້າເອງໃສ່ພຣະທຳຂອງເຮົາ ແລະ ບາງຄັ້ງ ພວກເຈົ້າກໍຖືກສຳຜັດ ແລະ ດົນໃຈ; ທັງໝົດນີ້ລ້ວນແລ້ວແຕ່ເປັນພາລະກິດຂອງພຣະວິນຍານບໍລິສຸດ. ບາງຄົນເວົ້າວ່າ ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດໃນພວກເຂົາຕະຫຼອດເວລາ. ສິ່ງນີ້ແມ່ນເປັນໄປບໍ່ໄດ້. ຖ້າພວກເຂົາເວົ້າວ່າພຣະວິນຍານບໍລິສຸດຢູ່ກັບພວກເຂົາສະເໝີ, ສິ່ງນັ້ນກໍຈະເປັນຄວາມຈິງ. ຖ້າພວກເຂົາເວົ້າວ່າການຄິດ ແລະ ຄວາມຮູ້ສຶກຂອງພວກເຂົາປົກກະຕິຢູ່ຕະຫຼອດເວລາ, ສິ່ງນັ້ນກໍຈະເປັນຈິງເຊັ່ນກັນ ແລະ ສະແດງວ່າພຣະວິນຍານບໍລິສຸດແມ່ນຢູ່ກັບພວກເຂົາ. ຖ້າພວກເຂົາເວົ້າວ່າ ພຣະວິນຍານບໍລິສຸດປະຕິບັດພາລະກິດພາຍໃນພວກເຂົາຢູ່ສະເໝີ, ພວກເຂົາໄດ້ຮັບແສງສະຫວ່າງຈາກພຣະເຈົ້າ ແລະ ຖືກສຳຜັດໂດຍພຣະວິນຍານບໍລິສຸດໃນທຸກຊ່ວງເວລາ ແລະ ໄດ້ຮັບຄວາມຮູ້ໃໝ່ຕະຫຼອດເວລາ, ສິ່ງນີ້ແມ່ນເລື່ອງປົກກະຕິຢ່າງແນ່ນອນ! ມັນເປັນສິ່ງທີ່ເໜືອທຳມະຊາດທັງໝົດ! ຄົນປະເພດດັ່ງກ່າວເປັນວິນຍານຊົ່ວຮ້າຍໂດຍບໍ່ຕ້ອງສົງໄສເລີຍ! ແມ່ນແຕ່ໃນເວລາທີ່ພຣະວິນຍານຂອງພຣະເຈົ້າມາເປັນເນື້ອໜັງກໍຈະມີເວລາທີ່ພຣະອົງຕ້ອງກິນ ແລະ ຕ້ອງພັກຜ່ອນ, ເຊິ່ງສຳລັບມະນຸດແລ້ວແມ່ນບໍ່ຕ້ອງເວົ້າເຖິງເລີຍ. ຄົນທີ່ຖືກຄອບງຳໂດຍວິນຍານຊົ່ວຮ້າຍເບິ່ງຄືກັບວ່າປາສະຈາກຄວາມອ່ອນແອຂອງເນື້ອໜັງ. ພວກເຂົາສາມາດປະຖິ້ມ ແລະ ສະຫຼະທຸກສິ່ງ, ພວກເຂົາເປັນອິດສະຫຼະຈາກຄວາມຮູ້ສຶກ, ສາມາດອົດກັ້ນຕໍ່ການທໍລະມານ ແລະ ບໍ່ຮູ້ສຶກເຖິງຄວາມອິດເມື່ອຍແມ່ນແຕ່ໜ້ອຍດຽວ, ຄືກັບວ່າ ພວກເຂົາໄດ້ຢູ່ເໜືອເນື້ອໜັງ. ສິ່ງນີ້ບໍ່ແມ່ນຢູ່ເໜືອທຳມະຊາດທີ່ສຸດບໍ? ພາລະກິດຂອງວິນຍານຊົ່ວຮ້າຍແມ່ນຢູ່ເໜືອທຳມະຊາດ, ບໍ່ມີມະນຸດຄົນໃດສາມາດບັນລຸສິ່ງດັ່ງກ່າວໄດ້! ຄົນທີ່ປາສະຈາກການແຍກແຍະແມ່ນອິດສາເມື່ອພວກເຂົາເຫັນຄົນປະເພດດັ່ງກ່າວ: ພວກເຂົາເວົ້າວ່າພວກເຂົາມີພະລັງໃນຄວາມເຊື່ອຂອງພວກເຂົາທີ່ມີຕໍ່ພຣະເຈົ້າ, ມີຄວາມເຊື່ອທີ່ຍິ່ງໃຫຍ່ ແລະ ບໍ່ເຄີຍສະແດງທ່າທີອ່ອນແອແມ່ນແຕ່ໜ້ອຍດຽວ! ໃນຄວາມເປັນຈິງແລ້ວ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນການສະແດງອອກຂອງພາລະກິດຂອງວິນຍານຊົ່ວຮ້າຍ. ຍ້ອນຜູ້ຄົນທຳມະດາມີຄວາມອ່ອນແອຂອງມະນຸດຢ່າງຫຼີກເວັ້ນບໍ່ໄດ້; ສິ່ງນີ້ແມ່ນສະພາວະປົກກະຕິຂອງຄົນທີ່ມີການສະຖິດຂອງພຣະວິນຍານບໍລິສຸດ.

ການຍຶດໝັ້ນໃນຄຳພະຍານຂອງຕົນເອງໝາຍເຖິງຫຍັງ? ບາງຄົນເວົ້າວ່າພວກເຂົາພຽງແຕ່ຕິດຕາມດັ່ງທີ່ພວກເຂົາເຮັດໃນຕອນນີ້ ແລະ ບໍ່ໄດ້ກັງວົນໃຈວ່າພວກເຂົາຈະສາມາດໄດ້ຮັບຊີວິດ ຫຼື ບໍ່; ພວກເຂົາບໍ່ສະແຫວງຫາຊີວິດ, ແຕ່ພວກເຂົາກໍບໍ່ຖອຍເຊັ່ນດຽວກັນ. ພວກເຂົາພຽງແຕ່ຮັບຮູ້ວ່າຂັ້ນຕອນນີ້ຂອງພາລະກິດແມ່ນຖືກປະຕິບັດໂດຍພຣະເຈົ້າ. ສິ່ງນີ້ບໍ່ແມ່ນການລົ້ມເຫຼວໃນຄຳພະຍານຂອງພວກເຂົາບໍ? ຄົນປະເພດດັ່ງກ່າວບໍ່ໄດ້ເປັນພະຍານເຖິງການຖືກເອົາຊະນະ. ຄົນທີ່ຖືກເອົາຊະນະຈະຕິດຕາມໂດຍບໍ່ສົນໃຈສິ່ງອື່ນໃດທັງໝົດ ແລະ ສາມາດສະແຫວງຫາຊີວິດ. ພວກເຂົາບໍ່ພຽງແຕ່ເຊື່ອໃນ

ພຣະເຈົ້າທີ່ເປັນຈິງ, ແຕ່ຍັງຮູ້ຈັກປະຕິບັດຕາມການຈັດແຈງທັງໝົດຂອງພຣະເຈົ້າ. ຄົນດັ່ງກ່າວແມ່ນຄົນທີ່ເປັນພະຍານ. ຄົນທີ່ບໍ່ເປັນພະຍານບໍ່ເຄີຍສະແຫວງຫາຊີວິດຈັກເທື່ອ ແລະ ຍັງຕິດຕາມແບບບໍ່ມີຈຸດໝາຍ. ເຈົ້າອາດຕິດຕາມ, ແຕ່ສິ່ງນີ້ບໍ່ໄດ້ໝາຍຄວາມວ່າເຈົ້າຖືກເອົາຊະນະແລ້ວ, ຍ້ອນເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບພາລະກິດຂອງພຣະເຈົ້າໃນປັດຈຸບັນ. ເງື່ອນໄຂບາງຂໍ້ຕ້ອງຖືກບັນລຸເພື່ອຈະຖືກເອົາຊະນະ. ບໍ່ແມ່ນທຸກຄົນທີ່ຕິດຕາມຈະຖືກເອົາຊະນະ, ຍ້ອນໃນຫົວໃຈຂອງເຈົ້າ ເຈົ້າບໍ່ເຂົ້າໃຈຫຍັງເລີຍວ່າ ເປັນຫຍັງເຈົ້າຕ້ອງຕິດຕາມພຣະເຈົ້າແຫ່ງປັດຈຸບັນ ຫຼື ເຈົ້າບໍ່ຮູ້ຈັກວ່າ ເຈົ້າໄດ້ມາຮອດປັດຈຸບັນນີ້ດ້ວຍວິທີໃດ, ຜູ້ໃດສະໜັບສະໜູນເຈົ້າຈົນເຖິງປັດຈຸບັນ. ການປະຕິບັດຕໍ່ຄວາມເຊື່ອໃນພຣະເຈົ້າຂອງບາງຄົນແມ່ນໂງ່ຈ້າ ແລະ ສັບສົນຢູ່ສະເໝີ; ສະນັ້ນ ການຕິດຕາມບໍ່ຈຳເປັນຕ້ອງໝາຍຄວາມວ່າເຈົ້າມີຄຳພະຍານ. ແມ່ນຫຍັງຄືຄຳພະຍານທີ່ແທ້ຈິງ? ຄຳພະຍານທີ່ກ່າວເຖິງໃນນີ້ມີສອງສ່ວນ: ສ່ວນໜຶ່ງແມ່ນຄຳພະຍານຂອງການຖືກເອົາຊະນະ ແລະ ອີກສ່ວນໜຶ່ງແມ່ນຄຳພະຍານຂອງການຖືກເຮັດໃຫ້ສົມບູນ (ເຊິ່ງຈະເປັນຄຳພະຍານຫຼັງຈາກການທົດລອງທີ່ຍິ່ງໃຫຍ່ ແລະ ຄວາມລຳບາກຍາກແຄ້ນໃນອະນາຄົດຢ່າງແນ່ນອນ). ເວົ້າອີກຢ່າງໜຶ່ງກໍຄື ຖ້າເຈົ້າສາມາດຍຶດໝັ້ນໃນລະຫວ່າງຄວາມລຳບາກຍາກແຄ້ນ ແລະ ການທົດສອບ, ເຈົ້າກໍຈະມີຂັ້ນຕອນທີສອງຂອງການເປັນພະຍານ. ສິ່ງທີ່ສຳຄັນໃນປັດຈຸບັນແມ່ນຂັ້ນຕອນທຳອິດຂອງກັນເປັນພະຍານ: ນັ້ນກໍຄື ການສາມາດຍຶດໝັ້ນທຸກສະຖານະການຂອງການທົດສອບແຫ່ງການຂ້ຽນຕີ ແລະ ການພິພາກສາ. ນີ້ແມ່ນການເປັນພະຍານໃນການຖືກເອົາຊະນະ. ນັ້ນກໍຍ້ອນວ່າ ປັດຈຸບັນນີ້ແມ່ນເວລາແຫ່ງການເອົາຊະນະ. (ເຈົ້າຄວນຮູ້ຈັກວ່າ ປັດຈຸບັນນີ້ແມ່ນເວລາແຫ່ງພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກ; ພາລະກິດຫຼັກຂອງພຣະເຈົ້າທີ່ບັງເກີດເປັນມະນຸດຢູ່ເທິງແຜ່ນດິນໂລກແມ່ນການເອົາຊະນະຄົນກຸ່ມນີ້ຢູ່ເທິງແຜ່ນດິນໂລກ ຜູ້ເຊິ່ງຕິດຕາມພຣະອົງຜ່ານການພິພາກສາ ແລະ ການຂ້ຽນຕີ). ບໍ່ວ່າເຈົ້າຈະສາມາດເປັນພະຍານເຖິງການຖືກເອົາຊະນະ ຫຼື ບໍ່ແມ່ນບໍ່ໄດ້ຂຶ້ນຢູ່ກັບວ່າ ເຈົ້າຈະສາມາດຕິດຕາມຈົນເຖິງທີ່ສຸດ ຫຼື ບໍ່, ແຕ່ສຳຄັນໄປກວ່ານັ້ນກໍຄື ເຈົ້າໄດ້ປະສົບກັບແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ຫຼື ບໍ່, ເຈົ້າສາມາດເຂົ້າໃຈເຖິງການຂ້ຽນຕີ ແລະ ການພິພາກສາຂອງພຣະເຈົ້າຢ່າງແທ້ຈິງ ຫຼື ບໍ່ ແລະ ເຈົ້າຮັບຮູ້ພາລະກິດທັງໝົດນີ້ຢ່າງແທ້ຈິງ ຫຼື ບໍ່. ເຈົ້າຈະບໍ່ສາມາດຜ່ານໄປໄດ້ຢ່າງງ່າຍໆໂດຍການຕິດຕາມຈົນເຖິງທີ່ສຸດເທົ່ານັ້ນ. ເຈົ້າຕ້ອງສາມາດເຕັມໃຈທີ່ຈະຍອມທຸກສະຖານະການຂອງການຂ້ຽນຕີ ແລະ ການພິພາກສາ, ຕ້ອງສາມາດເຂົ້າໃຈແຕ່ລະຂັ້ນຕອນຂອງພາລະກິດທີ່ເຈົ້າໄດ້ປະສົບກັບຢ່າງແທ້ຈິງ ແລະ ຕ້ອງສາມາດຮັບເອົາຄວາມຮູ້ ແລະ ຄວາມເຊື່ອຟັງອຸປະນິໄສຂອງພຣະເຈົ້າ. ນີ້ແມ່ນການເປັນພະຍານທີ່ແທ້ຈິງຂອງການຖືກເອົາຊະນະ ເຊິ່ງເຈົ້າຈຳເປັນຕ້ອງແບກຮັບ. ການເປັນພະຍານໃນການຖືກເອົາຊະນະ ຕົ້ນຕໍແລ້ວ ແມ່ນໝາຍເຖິງຄວາມຮູ້ຂອງເຈົ້າກ່ຽວກັບການບັງເກີດເປັນມະນຸດຂອງພຣະເຈົ້າ. ສິ່ງທີ່ສຳຄັນກໍຄື ຂັ້ນຕອນນີ້ຂອງການເປັນພະຍານແມ່ນການບັງເກີດເປັນມະນຸດຂອງພຣະເຈົ້າ. ມັນບໍ່ສຳຄັນວ່າເຈົ້າຈະເຮັດຫຍັງ ຫຼື ເວົ້າຫຍັງຕໍ່ໜ້າຜູ້ຄົນເທິງໂລກ ຫຼື ຄົນທີ່ມີອຳນາດ; ສິ່ງທີ່ສຳຄັນເໜືອສິ່ງອື່ນໃດກໍຄື ເຈົ້າສາມາດເຊື່ອຟັງພຣະທຳທຸກຂໍ້ທີ່ມາຈາກປາກຂອງພຣະເຈົ້າ ແລະ ພາລະກິດທັງໝົດຂອງພຣະອົງ ຫຼື ບໍ່. ສະນັ້ນ ຂັ້ນຕອນ

ນີ້ຂອງການເປັນພະຍານຈຶ່ງແນໃສ່ຊາຕານ ແລະ ສັດຕູຂອງພຣະເຈົ້າທັງໝົດ ເຊິ່ງນັ້ນກໍຄື ມານຮ້າຍ ແລະ ສັດຕູທີ່ບໍ່ເຊື່ອວ່າພຣະເຈົ້າຈະກາຍມາເປັນເນື້ອໜັງຄັ້ງທີສອງ ແລະ ມາເພື່ອປະຕິບັດພາລະກິດທີ່ຍິ່ງໃຫຍ່ກວ່າເດີມ ແລະ ຍິ່ງໄປກວ່ານັ້ນ ບໍ່ເຊື່ອໃນຄວາມຈິງຂອງການກັບມາສູ່ເນື້ອໜັງຂອງພຣະເຈົ້າ. ເວົ້າອີກຢ່າງກໍຄື ຂັ້ນຕອນນີ້ແມ່ນແນໃສ່ຜູ້ຕໍ່ຕ້ານພຣະຄຣິດທັງໝົດ, ສັດຕູທັງໝົດທີ່ບໍ່ເຊື່ອໃນການບັງເກີດເປັນມະນຸດຂອງພຣະເຈົ້າ.

ການຄິດເຖິງພຣະເຈົ້າ ແລະ ການປາຖະໜາຫາພຣະເຈົ້າບໍ່ໄດ້ພິສູດວ່າເຈົ້າຖືກພຣະເຈົ້າເອົາຊະນະ; ສິ່ງນີ້ຂຶ້ນກັບວ່າ ເຈົ້າເຊື່ອວ່າພຣະອົງເປັນພຣະທຳທີ່ກາຍເປັນເນື້ອໜັງ ຫຼື ບໍ່, ເຈົ້າເຊື່ອວ່າພຣະທຳໄດ້ກາຍມາເປັນເນື້ອໜັງ ຫຼື ບໍ່ ແລະ ເຈົ້າເຊື່ອວ່າພຣະວິນຍານໄດ້ກາຍມາເປັນພຣະທຳ ຫຼື ບໍ່ ແລະ ພຣະທຳໄດ້ປາກົດໃນເນື້ອໜັງ ຫຼື ບໍ່. ນີ້ແມ່ນການເປັນພະຍານທີ່ສຳຄັນ. ມັນບໍ່ສຳຄັນວ່າເຈົ້າຕິດຕາມແນວໃດ ຫຼື ເຈົ້າເສຍສະຫຼະຕົນເອງແບບໃດ; ສິ່ງທີ່ສຳຄັນກໍຄື ຈາກຄວາມເປັນມະນຸດທີ່ປົກກະຕິນີ້ ເຈົ້າສາມາດຄົ້ນພົບວ່າພຣະທຳໄດ້ກາຍມາເປັນເນື້ອໜັງ ແລະ ພຣະວິນຍານແຫ່ງຄວາມຈິງໄດ້ບັງເກີດໃນເນື້ອໜັງ ເຊິ່ງນັ້ນກໍຄື ຄວາມຈິງ, ຫົນທາງ ແລະ ຊີວິດທັງໝົດໄດ້ກາຍມາເປັນເນື້ອໜັງ, ພຣະວິນຍານຂອງພຣະເຈົ້າໄດ້ມາເຖິງແຜ່ນດິນໂລກຢ່າງແທ້ຈິງ ແລະ ພຣະວິນຍານໄດ້ກາຍມາເປັນເນື້ອໜັງ. ເຖິງແມ່ນວ່າໃນດ້ານຜິວເຜີນ ເບິ່ງຄືກັບວ່າ ສິ່ງນີ້ແມ່ນແຕກຕ່າງຈາກແນວຄວາມຄິດຂອງພຣະວິນຍານບໍລິສຸດ, ໃນພາລະກິດນີ້ ເຈົ້າຈະສາມາດເຫັນຢ່າງຊັດເຈນຍິ່ງຂຶ້ນວ່າ ພຣະວິນຍານຖືກເຮັດໃຫ້ເປັນຈິງໃນເນື້ອໜັງ ແລະ ຍິ່ງໄປກວ່ານັ້ນ ພຣະທຳໄດ້ກາຍມາເປັນເນື້ອໜັງ ແລະ ພຣະທຳໄດ້ປາກົດໃນເນື້ອໜັງ. ເຈົ້າສາມາດເຂົ້າໃຈຄວາມໝາຍແທ້ຈິງຂອງພຣະທຳທີ່ວ່າ: "ໃນຕົ້ນເດີມນັ້ນຊົງເປັນພຣະທຳຢູ່ແລ້ວ ແລະ ພຣະທຳຊົງຢູ່ກັບພຣະເຈົ້າ ແລະ ພຣະທຳຊົງເປັນພຣະເຈົ້າ". ຍິ່ງໄປກວ່ານັ້ນ ເຈົ້າຕ້ອງເຂົ້າໃຈວ່າພຣະທຳໃນປັດຈຸບັນແມ່ນພຣະເຈົ້າ ແລະ ເບິ່ງເຫັນວ່າພຣະທຳກາຍມາເປັນເນື້ອໜັງ. ສິ່ງນີ້ແມ່ນການເປັນພະຍານທີ່ດີທີ່ສຸດທີ່ເຈົ້າສາມາດເປັນໄດ້. ສິ່ງນີ້ພິສູດວ່າເຈົ້າມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າທີ່ກາຍມາເປັນເນື້ອໜັງ, ເຈົ້າບໍ່ພຽງແຕ່ສາມາດຮູ້ຈັກພຣະອົງ, ແຕ່ຍັງຮູ້ຈັກວ່າຫົນທາງທີ່ເຈົ້າຍ່າງໃນປັດຈຸບັນແມ່ນຫົນທາງແຫ່ງຊີວິດ ແລະ ຫົນທາງແຫ່ງຄວາມຈິງ. ຂັ້ນຕອນຂອງພາລະກິດທີ່ພຣະເຢຊູປະຕິບັດແມ່ນພຽງແຕ່ເພື່ອເຮັດໃຫ້ສຳເລັດຕາມແກ່ນແທ້ທີ່ວ່າ "ພຣະທຳຢູ່ກັບພຣະເຈົ້າ": ຄວາມຈິງຂອງພຣະເຈົ້າຢູ່ກັບພຣະເຈົ້າ ແລະ ພຣະວິນຍານຂອງພຣະເຈົ້າຢູ່ກັບເນື້ອໜັງ ແລະ ບໍ່ສາມາດຕັດຂາດຈາກເນື້ອໜັງໄດ້. ນັ້ນກໍຄື ເນື້ອໜັງຂອງພຣະເຈົ້າທີ່ບັງເກີດເປັນມະນຸດຢູ່ກັບພຣະວິນຍານຂອງພຣະເຈົ້າ ເຊິ່ງເປັນເຄື່ອງພິສູດຢ່າງໃຫຍ່ກ່ຽວກັບພຣະເຢຊູທີ່ບັງເກີດເປັນມະນຸດ ແມ່ນການບັງເກີດເປັນມະນຸດຄັ້ງທຳອິດຂອງພຣະເຈົ້າ. ຂັ້ນຕອນນີ້ຂອງພາລະກິດເຮັດສຳເລັດຕາມຄວາມໝາຍແທ້ຈິງຂອງພຣະທຳທີ່ວ່າ "ພຣະທຳກາຍມາເປັນເນື້ອໜັງ", ເພີ່ມເຕີມຄວາມໝາຍຢ່າງເລິກເຊິ່ງຕໍ່ພຣະທຳທີ່ວ່າ "ພຣະທຳຢູ່ກັບພຣະເຈົ້າ ແລະ ພຣະທຳເປັນພຣະເຈົ້າ" ແລະ ເຮັດໃຫ້ເຈົ້າເຊື່ອຢ່າງໜັກແໜ້ນໃນພຣະທຳທີ່ວ່າ "ໃນຕົ້ນເດີມນັ້ນຊົງມີພຣະທຳຢູ່ແລ້ວ". ນັ້ນໝາຍຄວາມວ່າ ໃນເວລາແຫ່ງການເນລະມິດສ້າງ ພຣະເຈົ້າມີພຣະທຳ, ພຣະທຳຂອງພຣະອົງຢູ່ກັບພຣະອົງ ແລະ ບໍ່ສາມາດຕັດຂາດຈາກພຣະອົງໄດ້ ແລະ

ໃນຍຸກສຸດທ້າຍ, ພຣະອົງຍິ່ງເຮັດໃຫ້ລິດອຳນາດ ແລະ ສິດອຳນາດຂອງພຣະທຳຂອງພຣະອົງຊັດເຈນຫຼາຍຍິ່ງຂຶ້ນ ແລະ ເຮັດໃຫ້ມະນຸດເຫັນເຖິງຫົນທາງທັງໝົດຂອງພຣະອົງ, ໄດ້ຍິນພຣະທຳທັງໝົດຂອງພຣະອົງ. ສິ່ງດັ່ງກ່າວແມ່ນພາລະກິດແຫ່ງຍຸກສຸດທ້າຍ. ເຈົ້າຕ້ອງເຂົ້າໃຈສິ່ງເຫຼົ່ານີ້ຢ່າງທົ່ວເຖິງ. ມັນບໍ່ແມ່ນຄຳຖາມກ່ຽວກັບການຮູ້ຈັກເນື້ອໜັງ, ແຕ່ກ່ຽວກັບວິທີທີ່ເຈົ້າເຂົ້າໃຈເນື້ອໜັງ ແລະ ພຣະທຳ. ນີ້ແມ່ນຄຳພະຍານທີ່ເຈົ້າຕ້ອງເປັນ ເຊິ່ງທຸກຄົນຕ້ອງຮູ້. ຍ້ອນນີ້ແມ່ນພາລະກິດຂອງການບັງເກີດເປັນມະນຸດຄັ້ງທີສອງ ແລະ ຄັ້ງສຸດທ້າຍທີ່ພຣະເຈົ້າຈະກາຍມາເປັນເນື້ອໜັງ, ມັນເຮັດໃຫ້ຄວາມໝາຍຂອງການບັງເກີດເປັນມະນຸດສຳເລັດຢ່າງສົມບູນ, ໄດ້ຖືກປະຕິບັດຢ່າງທົ່ວເຖິງ ແລະ ກໍ່ໃຫ້ເກີດພາລະກິດທັງໝົດຂອງພຣະເຈົ້າໃນເນື້ອໜັງ ແລະ ນຳຍຸກຂອງການເປັນຢູ່ຂອງພຣະເຈົ້າໃນເນື້ອໜັງມາສູ່ຈຸດສຸດທ້າຍ. ສະນັ້ນ ເຈົ້າຕ້ອງຮູ້ຈັກເຖິງຄວາມໝາຍຂອງການບັງເກີດເປັນມະນຸດ. ມັນບໍ່ສຳຄັນວ່າເຈົ້າແລ່ນໄປມາຫຼາຍສໍ່າໃດ ຫຼື ເຈົ້າປະຕິບັດກັບສິ່ງພາຍນອກໄດ້ດີສໍ່າໃດ; ສິ່ງທີ່ສຳຄັນກໍຄື ເຈົ້າສາມາດຍອມອ່ອນນ້ອມຢູ່ຕໍ່ໜ້າພຣະເຈົ້າທີ່ບັງເກີດເປັນມະນຸດຢ່າງແທ້ຈິງ ແລະ ອຸທິດການເປັນຢູ່ທັງໝົດຂອງເຈົ້າໃຫ້ກັບພຣະເຈົ້າ ແລະ ເຊື່ອຟັງພຣະທຳທຸກຂໍ້ທີ່ອອກມາຈາກປາກຂອງພຣະອົງ ຫຼື ບໍ່. ນີ້ແມ່ນສິ່ງທີ່ເຈົ້າຄວນເຮັດ ແລະ ສິ່ງທີ່ເຈົ້າຄວນປະຕິບັດຕາມ.

ຂັ້ນຕອນສຸດທ້າຍໃນການເປັນພະຍານກໍຄື ເຈົ້າສາມາດຖືກເຮັດໃຫ້ສົມບູນ ຫຼື ບໍ່ ເຊິ່ງໝາຍຄວາມວ່າ ເມື່ອເຂົ້າໃຈພຣະທຳທັງໝົດທີ່ກ່າວອອກມາຈາກປາກຂອງພຣະເຈົ້າທີ່ບັງເກີດເປັນມະນຸດແລ້ວ ເຈົ້າກໍຈະມີຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ຍິ່ງໝັ້ນໃຈກ່ຽວກັບພຣະອົງ, ເຈົ້າປະຕິບັດຕາມພຣະທຳທຸກຂໍ້ທີ່ມາຈາກປາກຂອງພຣະເຈົ້າ ແລະ ບັນລຸເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຈາກເຈົ້າຄືກັບລັກສະນະຂອງເປໂຕ ແລະ ຄວາມເຊື່ອຂອງໂຢບ, ເຊິ່ງນັ້ນກໍຄື ເຈົ້າຕ້ອງສາມາດເຊື່ອຟັງຈົນຕາຍ, ມອບຕົນເອງໃຫ້ກັບພຣະອົງທັງໝົດ ແລະ ໃນທີ່ສຸດ ກໍບັນລຸໃນຮູບແບບຂອງຄົນທີ່ມີມາດຕະຖານ ເຊິ່ງໝາຍຄວາມວ່າ ໃນຮູບລັກສະນະຂອງຄົນທີ່ຖືກເອົາຊະນະ ແລະ ຖືກເຮັດໃຫ້ສົມບູນຫຼັງຈາກທີ່ໄດ້ປະສົບກັບການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າ. ນີ້ແມ່ນການເປັນພະຍານທີ່ແທ້ຈິງ, ມັນແມ່ນການເປັນພະຍານທີ່ຄວນມີໃນຜູ້ຄົນທີ່ຖືກເຮັດໃຫ້ສົມບູນຢ່າງແທ້ຈິງ. ສິ່ງເຫຼົ່ານີ້ແມ່ນການເປັນພະຍານສອງຂັ້ນຕອນທີ່ເຈົ້າຄວນມີ ແລະ ທັງສອງຢ່າງແມ່ນກ່ຽວພັນກັນ ເຊິ່ງແຕ່ລະຢ່າງແມ່ນບໍ່ສາມາດຕັດອອກຈາກກັນໄດ້. ແຕ່ມີສິ່ງໜຶ່ງທີ່ເຈົ້າຕ້ອງຮູ້: ການເປັນພະຍານທີ່ເຮົາຮຽກຮ້ອງຈາກເຈົ້າໃນປັດຈຸບັນນີ້ ບໍ່ໄດ້ແນໃສ່ຜູ້ຄົນເທິງແຜ່ນດິນໂລກ ຫຼື ບຸກຄົນໃດຄົນໜຶ່ງ, ແຕ່ແນໃສ່ສິ່ງທີ່ເຮົາຮຽກຮ້ອງຈາກເຈົ້າ. ມັນວັດແທກໂດຍຄວາມສາມາດຂອງເຈົ້າ ວ່າເຈົ້າຈະສາມາດເຮັດໃຫ້ເຮົາພໍໃຈ ຫຼື ບໍ່ ແລະ ເຈົ້າຈະສາມາດບັນລຸຕາມມາດຕະຖານຂອງເງື່ອນໄຂທີ່ເຮົາຮຽກຮ້ອງຈາກພວກເຈົ້າແຕ່ລະຄົນໄດ້ ຫຼື ບໍ່. ນີ້ແມ່ນສິ່ງທີ່ພວກເຈົ້າຄວນເຂົ້າໃຈ.

# ການປະຕິບັດ (5)

ໃນລະຫວ່າງຍຸກແຫ່ງພຣະຄຸນ, ພຣະເຢຊູໄດ້ກ່າວພຣະທຳບາງຢ່າງ ແລະ ປະຕິບັດໜຶ່ງຂັ້ນຕອນຂອງພາລະກິດ. ທຸກສິ່ງມີບໍລິບົດຂອງມັນ ແລະ ພວກມັນກໍລ້ວນແລ້ວແຕ່ເໝາະສົມສຳລັບສະພາວະຂອງຜູ້ຄົນໃນເວລານັ້ນ; ພຣະເຢຊູກ່າວ ແລະ ເຮັດພາລະກິດຢ່າງເໝາະສົມກັບບໍລິບົດໃນເວລານັ້ນ. ພຣະອົງຍັງກ່າວຄຳທຳນາຍບາງຢ່າງ. ພຣະອົງທຳນາຍວ່າ ພຣະວິນຍານແຫ່ງຄວາມຈິງຈະມາໃນລະຫວ່າງຍຸກສຸດທ້າຍ ແລະ ຈະປະຕິບັດໜຶ່ງຂັ້ນຕອນຂອງພາລະກິດ. ນັ້ນໝາຍຄວາມວ່າ ພຣະອົງບໍ່ໄດ້ເຂົ້າໃຈຫຍັງເລີຍນອກຈາກພາລະກິດທີ່ພຣະອົງຕ້ອງປະຕິບັດໃນລະຫວ່າງຍຸກນັ້ນ; ເວົ້າອີກຢ່າງກໍຄື ພາລະກິດທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດປະຕິບັດນັ້ນແມ່ນຈຳກັດ. ສະນັ້ນ ພຣະອົງພຽງແຕ່ປະຕິບັດພາລະກິດໃນຍຸກຂອງພຣະອົງ ແລະ ບໍ່ໄດ້ປະຕິບັດພາລະກິດອື່ນທີ່ບໍ່ໄດ້ກ່ຽວຂ້ອງກັບພຣະອົງ. ໃນເວລານັ້ນ ພຣະເຢຊູບໍ່ໄດ້ປະຕິບັດພາລະກິດຕາມຄວາມຮູ້ສຶກ ຫຼື ນິມິດ, ແຕ່ຕາມທີ່ເໝາະສົມກັບເວລາ ແລະ ບໍລິບົດ. ບໍ່ມີໃຜຊີ້ນຳ ຫຼື ນຳພາພຣະອົງ. ພາລະກິດທັງໝົດຂອງພຣະອົງແມ່ນການເປັນຢູ່ຂອງພຣະອົງເອງ, ມັນແມ່ນພາລະກິດທີ່ພຣະວິນຍານຂອງພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດຄວນປະຕິບັດ ເຊິ່ງພາລະກິດທັງໝົດແມ່ນເລີ່ມຕົ້ນໂດຍການບັງເກີດເປັນມະນຸດ. ພຣະເຢຊູປະຕິບັດພາລະກິດຕາມສິ່ງທີ່ພຣະອົງເອງໄດ້ເຫັນ ແລະ ໄດ້ຍິນເທົ່ານັ້ນ. ເວົ້າອີກຢ່າງກໍຄື ພຣະວິນຍານປະຕິບັດພາລະກິດໂດຍກົງ; ບໍ່ຈຳເປັນຕ້ອງມີຜູ້ສົ່ງຂ່າວປາກົດຕໍ່ພຣະອົງ ແລະ ເຮັດໃຫ້ພຣະອົງຝັນ ຫຼື ຕ້ອງການໃຫ້ແສງສະຫວ່າງທີ່ຍິ່ງໃຫຍ່ສ່ອງມາເຖິງພຣະອົງ ແລະ ເຮັດໃຫ້ພຣະອົງເຫັນ. ພຣະອົງປະຕິບັດພາລະກິດຢ່າງເປັນອິດສະຫຼະ ແລະ ປາສະຈາກຂໍ້ຈຳກັດ ເຊິ່ງນັ້ນກໍຍ້ອນວ່າ ພາລະກິດຂອງພຣະອົງບໍ່ໄດ້ອີງຕາມຄວາມຮູ້ສຶກ. ເວົ້າອີກຢ່າງກໍຄື ເມື່ອພຣະອົງປະຕິບັດພາລະກິດ, ພຣະອົງບໍ່ໄດ້ງົມຫາວຫາ ແລະ ຄາດເດົາ, ແຕ່ສຳເລັດສິ່ງຕ່າງໆຢ່າງງ່າຍດາຍ, ປະຕິບັດພາລະກິດ ແລະ ກ່າວຕາມແນວຄິດຂອງພຣະອົງເອງ ແລະ ກ່າວໃນສິ່ງທີ່ພຣະອົງເຫັນດ້ວຍຕາຂອງພຣະອົງເອງ, ໃຫ້ການເບິ່ງແຍງໃນທັນທີຕໍ່ສາວົກແຕ່ລະຄົນທີ່ຕິດຕາມພຣະອົງ. ນີ້ແມ່ນຄວາມແຕກຕ່າງລະຫວ່າງພາລະກິດຂອງພຣະເຈົ້າ ແລະ ພາລະກິດຂອງຜູ້ຄົນ: ເມື່ອຜູ້ຄົນປະຕິບັດພາລະກິດ, ພວກເຂົາຄົ້ນຫາ ແລະ ງົມຫາ, ລອກແບບ ແລະ ຕຶກຕອງບົນພື້ນຖານທີ່ຄົນອື່ນວາງໄວ້ຢູ່ສະເໝີເພື່ອບັນລຸການເຂົ້າທີ່ເລິກເຊິ່ງຍິ່ງຂຶ້ນ. ພາລະກິດຂອງພຣະເຈົ້າແມ່ນການສະໜອງສິ່ງທີ່ພຣະອົງເປັນ ແລະ ພຣະອົງປະຕິບັດພາລະກິດທີ່ພຣະອົງເອງຄວນປະຕິບັດ. ພຣະອົງບໍ່ໄດ້ສະໜອງການບຳລຸງລ້ຽງໃຫ້ກັບຄຣິສຕະຈັກໂດຍໃຊ້ຄວາມຮູ້ຈາກພາລະກິດຂອງມະນຸດຄົນໃດໜຶ່ງ. ກົງກັນຂ້າມພຣະອົງປະຕິບັດພາລະກິດໃນປັດຈຸບັນໂດຍອີງຕາມສະພາວະຂອງຜູ້ຄົນ. ສະນັ້ນ ການປະຕິບັດພາລະກິດໃນລັກສະນະນີ້ຈຶ່ງເປັນອິດສະຫຼະຫຼາຍກວ່າພາລະກິດທີ່ຜູ້ຄົນປະຕິບັດເປັນຫຼາຍພັນເທົ່າ. ສຳລັບຜູ້ຄົນແລ້ວ ມັນອາດເບິ່ງຄືວ່າ ພຣະເຈົ້າບໍ່ໄດ້ປະຕິບັດຕາມໜ້າທີ່ຂອງພຣະອົງ ແລະ ປະຕິບັດພາລະກິດຕາມທີ່ພຣະອົງພໍໃຈ, ແຕ່ວ່າ ພາລະກິດທັງໝົດທີ່ພຣະອົງປະຕິບັດແມ່ນເປັນພາລະກິດໃໝ່. ເຖິງຢ່າງໃດກໍຕາມ, ເຈົ້າຄວນຮູ້ຈັກວ່າ ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ເຄີຍອີງຕາມຄວາມຮູ້ສຶກ

ຈັກເທື່ອ. ໃນເວລານັ້ນ, ຫຼັງຈາກທີ່ພຣະເຢຊູໄດ້ສຳເລັດພາລະກິດຂອງພຣະອົງໃນການຖືກຄຶງໃສ່ໄມ້ກາງແຂນ, ຫຼັງຈາກທີ່ສາວົກຜູ້ທີ່ຕິດຕາມພຣະເຢຊູໄດ້ໄປເຖິງຈຸດໃດໜຶ່ງໃນປະສົບການຂອງພວກເຂົາ, ພວກເຂົາກໍຮູ້ສຶກວ່າ ມື້ຂອງພຣະເຈົ້າກຳລັງມາເຖິງ ແລະ ພວກເຂົາຈະພົບກັບພຣະຜູ້ເປັນເຈົ້າໃນໄວໆນີ້. ນັ້ນຄືຄວາມຮູ້ສຶກທີ່ພວກເຂົາມີ ແລະ ສຳລັບພວກເຂົາແລ້ວ ຄວາມຮູ້ສຶກນີ້ແມ່ນສຳຄັນທີ່ສຸດ. ແຕ່ໃນຄວາມຈິງແລ້ວ ຄວາມຮູ້ສຶກທີ່ຢູ່ພາຍໃນຜູ້ຄົນແມ່ນບໍ່ສາມາດເພິ່ງພາໄດ້. ພວກເຂົາຮູ້ສຶກວ່າ ບາງເທື່ອພວກເຂົາໃກ້ຈະໄປເຖິງປາຍທາງ ຫຼື ທຸກສິ່ງທີ່ພວກເຂົາເຮັດ ແລະ ທົນທຸກແມ່ນຖືກກຳນົດໂດຍພຣະເຈົ້າແລ້ວ. ໂປໂລຍັງເວົ້າວ່າ ເພິ່ນໄດ້ສຳເລັດເສັ້ນທາງແຂ່ງຂັນຂອງເພິ່ນ, ເພິ່ນໄດ້ຕໍ່ສູ້ຢ່າງສຸດກຳລັງ ແລະ ມີມົງກຸດແຫ່ງຄວາມຊອບທຳໄວ້ສຳລັບເພິ່ນ. ນັ້ນແມ່ນສິ່ງທີ່ເພິ່ນຮູ້ສຶກ ແລະ ເພິ່ນໄດ້ຂຽນສິ່ງນີ້ໃນຈົດໝາຍ ແລະ ສົ່ງຈົດໝາຍເຫຼົ່ານັ້ນໃຫ້ກັບຄຣິສຕະຈັກ. ການກະທຳດັ່ງກ່າວແມ່ນມາຈາກພາລະທີ່ເພິ່ນແບກຮັບສຳລັບຄຣິສຕະຈັກ ແລະ ດ້ວຍເຫດນັ້ນຈຶ່ງບໍ່ໄດ້ຖືກສົນໃຈໂດຍພຣະວິນຍານບໍລິສຸດ. ເມື່ອໂປໂລເວົ້າຄຳເວົ້າເຫຼົ່ານັ້ນ, ເພິ່ນບໍ່ໄດ້ມີຄວາມຮູ້ສຶກກັງວົນ ຫຼື ເພິ່ນບໍ່ຮູ້ສຶກເຖິງການຕຳນິໃດເລີຍ ແລະ ສະນັ້ນ ເພິ່ນຈຶ່ງເຊື່ອວ່າສິ່ງດັ່ງກ່າວເປັນເລື່ອງປົກກະຕິຫຼາຍ ແລະ ຖືກຕ້ອງພໍສົມຄວນ ແລະ ພວກມັນແມ່ນມາຈາກພຣະວິນຍານບໍລິສຸດ. ແຕ່ເມື່ອເບິ່ງຈາກປັດຈຸບັນ, ພວກມັນບໍ່ໄດ້ມາຈາກພຣະວິນຍານບໍລິສຸດເລີຍ. ພວກມັນບໍ່ໄດ້ເປັນຫຼາຍໄປກວ່າພາບລວງຕາຂອງມະນຸດ. ມີພາບລວງຕາຫຼາຍຢ່າງພາຍໃນມະນຸດ ແລະ ພຣະເຈົ້າກໍບໍ່ໄດ້ສົນໃຈໃນສິ່ງເຫຼົ່ານັ້ນ ຫຼື ສະແດງຄວາມຄິດເຫັນໃດເລີຍເມື່ອສິ່ງເຫຼົ່ານັ້ນເກີດຂຶ້ນ. ພາລະກິດສ່ວນໃຫຍ່ຂອງພຣະວິນຍານບໍລິສຸດບໍ່ໄດ້ຖືກປະຕິບັດຜ່ານທາງຄວາມຮູ້ສຶກຂອງຜູ້ຄົນ, ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດພາຍໃນຄວາມຮູ້ສຶກຂອງຜູ້ຄົນ ນອກຈາກໃນເວລາລຳບາກ ແລະ ມືດມົວກ່ອນທີ່ພຣະອົງຈະກາຍມາເປັນເນື້ອໜັງ ຫຼື ໄລຍະເວລາທີ່ບໍ່ມີອັກຄະສາວົກ ຫຼື ຜູ້ປະຕິບັດພາລະກິດ. ໃນລະຫວ່າງຂັ້ນຕອນນັ້ນ ພາລະກິດຂອງພຣະວິນຍານບໍລິສຸດມອບຄວາມຮູ້ສຶກທີ່ພິເສດບາງຢ່າງໃຫ້ກັບຜູ້ຄົນ. ຕົວຢ່າງເຊັ່ນ: ເມື່ອຜູ້ຄົນປາສະຈາກການນຳພາຈາກພຣະທຳຂອງພຣະເຈົ້າ, ພວກເຂົາກໍມີຄວາມຮູ້ສຶກເຖິງຄວາມສຸກທີ່ອະທິບາຍບໍ່ໄດ້ ເມື່ອພວກເຂົາອະທິຖານ; ພວກເຂົາມີຄວາມຮູ້ສຶກເບີກບານໃຈໃນຫົວໃຈຂອງພວກເຂົາ ແລະ ພວກເຂົາກໍມີຄວາມສະຫງົບສຸກ ແລະ ຄວາມສະບາຍໃຈ. ຫຼັງຈາກທີ່ພວກເຂົາມີການນຳພາຂອງພຣະທຳ, ຜູ້ຄົນກໍຮູ້ສຶກເຖິງຄວາມສົດໃສໃນວິນຍານຂອງພວກເຂົາ, ພວກເຂົາມີເສັ້ນທາງແຫ່ງການປະຕິບັດໃນການກະທຳຂອງພວກເຂົາ ແລະ ໂດຍທຳມະຊາດແລ້ວ ພວກເຂົາຍັງມີຄວາມຮູ້ສຶກເຖິງຄວາມສະຫງົບສຸກ ແລະ ຄວາມສະບາຍໃຈ. ເມື່ອຜູ້ຄົນຜະເຊີນກັບອັນຕະລາຍ ຫຼື ພຣະເຈົ້າຢຸດພວກເຂົາຈາກການເຮັດບາງສິ່ງບາງຢ່າງ, ໃນຫົວໃຈຂອງພວກເຂົາ ພວກເຂົາຮູ້ສຶກບໍ່ສະຫງົບສຸກ ແລະ ບໍ່ສະບາຍໃຈ. ສິ່ງເຫຼົ່ານີ້ແມ່ນຄວາມຮູ້ສຶກທີ່ພຣະວິນຍານບໍລິສຸດມອບໃຫ້ກັບມະນຸດທັງໝົດ. ເຖິງຢ່າງໃດກໍຕາມ ຖ້າສະພາບແວດລ້ອມປັ່ນປ່ວນກໍ່ໃຫ້ເກີດບັນຍາກາດແຫ່ງຄວາມຢ້ານກົວ, ເຮັດໃຫ້ຜູ້ຄົນກັງວົນ ແລະ ຢ້ານກົວເປັນພິເສດ, ນັ້ນແມ່ນການສະແດງອອກທີ່ປົກກະຕິຂອງຄວາມເປັນມະນຸດ ແລະ ບໍ່ກ່ຽວຂ້ອງກັບພາລະກິດຂອງພຣະວິນຍານບໍລິສຸດ.

ຜູ້ຄົນດຳລົງຊີວິດຢູ່ໃນທ່າມກາງຄວາມຮູ້ສຶກຂອງພວກເຂົາຢູ່ສະເໝີ ແລະ ໄດ້ເຮັດແບບນັ້ນເປັນເວລາຫຼາຍປີແລ້ວ. ເມື່ອພວກເຂົາສະຫງົບສຸກຢູ່ພາຍໃນຫົວໃຈຂອງພວກເຂົາ, ພວກເຂົາກໍກະທຳ (ໂດຍເຊື່ອວ່າຄວາມເຕັມໃຈຂອງພວກເຂົາແມ່ນຄວາມຮູ້ສຶກສະຫງົບສຸກ) ແລະ ເມື່ອພວກເຂົາບໍ່ໄດ້ສະຫງົບສຸກຢູ່ພາຍໃນຫົວໃຈຂອງພວກເຂົາ, ພວກເຂົາກໍບໍ່ກະທຳ (ໂດຍເຊື່ອວ່າຄວາມບໍ່ເຕັມໃຈ ຫຼື ຄວາມບໍ່ມັກຂອງພວກເຂົາແມ່ນຄວາມຮູ້ສຶກບໍ່ສະບາຍໃຈ). ຖ້າສິ່ງຕ່າງໆເປັນໄປຢ່າງລາບລື້ນ, ພວກເຂົາກໍຄິດວ່າ ມັນແມ່ນຄວາມປະສົງຂອງພຣະເຈົ້າ. (ໃນຄວາມເປັນຈິງແລ້ວ, ມັນແມ່ນສິ່ງທີ່ຄວນເປັນໄປຢ່າງລາບລື້ນ, ສິ່ງນີ້ແມ່ນກົດເກນທຳມະຊາດຂອງສິ່ງຕ່າງໆ). ເມື່ອສິ່ງຕ່າງໆບໍ່ເປັນໄປຢ່າງລາບລື້ນ, ພວກເຂົາກໍຄິດວ່າ ມັນບໍ່ແມ່ນຄວາມປະສົງຂອງພຣະເຈົ້າ. ເມື່ອພວກເຂົາພະເຊີນກັບສິ່ງທີ່ບໍ່ເປັນໄປຢ່າງລາບລື້ນ, ພວກເຂົາກໍເຊົາ. ຄວາມຮູ້ສຶກດັ່ງກ່າວບໍ່ຖືກຕ້ອງ ແລະ ການປະພຶດຕາມສິ່ງເຫຼົ່ານີ້ຈະເຮັດໃຫ້ຊັກຊ້າຫຼາຍຢ່າງ. ຕົວຢ່າງເຊັ່ນ: ຈະມີຄວາມຫຍຸ້ງຍາກເມື່ອນຳຄວາມຈິງເຂົ້າສູ່ການປະຕິບັດຢ່າງແນ່ນອນ ແລະ ຍິ່ງຈະມີຄວາມຫຍຸ້ງຍາກຫຼາຍຂຶ້ນໃນການປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ສິ່ງດີໆຫຼາຍຢ່າງຈະເຂົ້າໃຈໄດ້ຍາກ. ດັ່ງຄຳເວົ້າທີ່ວ່າ "ສິ່ງທີ່ຫຍຸ້ງຍາກມາກ່ອນທີ່ສິ່ງທີ່ດີຈະກາຍເປັນຈິງ". ຜູ້ຄົນມີຄວາມຮູ້ສຶກຫຼາຍເກີນໄປໃນຊີວິດຕົວຈິງຂອງພວກເຂົາ, ປ່ອຍໃຫ້ພວກເຂົາເຮັດຫຍັງບໍ່ຖືກຢູ່ສະເໝີ ແລະ ບໍ່ໝັ້ນໃຈກ່ຽວກັບຫຼາຍສິ່ງ. ບໍ່ມີຫຍັງທີ່ຊັດເຈນຕໍ່ຜູ້ຄົນ ນອກຈາກພວກເຂົາຈະສາມາດເຂົ້າໃຈຄວາມຈິງ. ແຕ່ໂດຍທົ່ວໄປແລ້ວ, ເມື່ອພວກເຂົາປະພຶດ ຫຼື ເວົ້າຕາມຄວາມຮູ້ສຶກຂອງພວກເຂົາ, ຕາບໃດທີ່ມັນບໍ່ແມ່ນສິ່ງທີ່ລະເມີດຕໍ່ຫຼັກການທີ່ສຳຄັນ, ພຣະວິນຍານບໍລິສຸດກໍຈະບໍ່ມີປະຕິກິລິຍາຫຍັງເລີຍ. ມັນເປັນຄືກັບ "ມົງກຸດແຫ່ງຄວາມຊອບທຳ" ທີ່ໂປໂລຮູ້ສຶກ: ເປັນເວລາຫຼາຍປີ, ບໍ່ມີໃຜເຊື່ອວ່າຄວາມຮູ້ສຶກຂອງເພິ່ນຜິດ ຫຼື ໂປໂລເອງກໍບໍ່ເຄີຍຮູ້ສຶກວ່າຄວາມຮູ້ສຶກຂອງເພິ່ນຜິດ. ຄວາມຮູ້ສຶກຂອງຜູ້ຄົນມາຈາກໃສ? ແນ່ນອນ ມັນແມ່ນປະຕິກິລິຍາທີ່ມາຈາກສະໝອງຂອງພວກເຂົາ. ຄວາມຮູ້ສຶກຕ່າງໆແມ່ນຖືກສ້າງຂຶ້ນຕາມສະພາບແວດລ້ອມທີ່ແຕກຕ່າງ ແລະ ບັນຫາທີ່ແຕກຕ່າງກັນ. ຕະຫຼອດເວລາ, ຜູ້ຄົນສະຫຼຸບຄວາມດ້ວຍເຫດຜົນຂອງມະນຸດເພື່ອຮັບເອົາຊຸດຕຳລາ ເຊິ່ງສິ່ງຜົນໃຫ້ເກີດຄວາມຮູ້ສຶກຫຼາຍຢ່າງຂອງມະນຸດ. ຜູ້ຄົນເຂົ້າສູ່ການສະຫຼຸບຄວາມດ້ວຍເຫດຜົນຂອງຕົນເອງຢ່າງບໍ່ຮູ້ສຶກຕົວຢ່າງບໍ່ຮູ້ສຶກຕົວ ແລະ ໃນລັກສະນະນີ້ ຄວາມຮູ້ສຶກເຫຼົ່ານີ້ກໍກາຍເປັນສິ່ງທີ່ພວກເຂົາເພິ່ງພາໃນຊີວິດຂອງພວກເຂົາ; ພວກມັນກາຍມາເປັນໄມ້ຄ້ຳຄວາມຮູ້ສຶກໃນຊີວິດຂອງພວກເຂົາ ເຊັ່ນ: "ມົງກຸດແຫ່ງຄວາມຊອບທຳ" ຂອງໂປໂລ ຫຼື "ການພົບພຣະຜູ້ເປັນເຈົ້າໃນອາກາດ" ຂອງພະຍານລີ. ພຣະເຈົ້າເກືອບບໍ່ມີທາງເຂົ້າແຊກແຊງໃນຄວາມຮູ້ສຶກເຫຼົ່ານີ້ຂອງມະນຸດ ແລະ ຕ້ອງຍອມໃຫ້ຄວາມຮູ້ສຶກເຫຼົ່ານັ້ນພັດທະນາຕາມທີ່ພວກມັນຕ້ອງການ. ໃນປັດຈຸບັນ, ເຮົາໄດ້ກ່າວກັບເຈົ້າຢ່າງແຈ່ມແຈ້ງກ່ຽວກັບຄວາມຈິງຫຼາຍດ້ານ. ຖ້າເຈົ້າສືບຕໍ່ດຳເນີນໄປຕາມຄວາມຮູ້ສຶກຂອງເຈົ້າ, ແລ້ວເຈົ້າຈະບໍ່ໄດ້ດຳລົງຊີວິດຢູ່ໃນທ່າມກາງຄວາມບໍ່ຊັດເຈນຄືເກົ່າບໍ? ເຈົ້າບໍ່ຍອມຮັບພຣະທຳທີ່ຖືກວາງໄວ້ສຳລັບເຈົ້າຢ່າງຊັດເຈນ ແລະ ອາໄສຄວາມຮູ້ສຶກສ່ວນຕົວຂອງເຈົ້າຢູ່ສະເໝີ. ໃນສິ່ງນີ້, ເຈົ້າບໍ່ໄດ້ເປັນຄືກັບມະນຸດຕາບອດທີ່ກຳລັງລູບຄຳຊ້າງບໍ? ແລ້ວໃນທີ່ສຸດ ເຈົ້າຈະໄດ້ຮັບຫຍັງ?

ພາລະກິດທຸກຢ່າງທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດປະຕິບັດໃນປັດຈຸບັນແມ່ນເປັນຈິງ. ສິ່ງນີ້ບໍ່ແມ່ນສິ່ງທີ່ເຈົ້າສາມາດຮູ້ສຶກໄດ້ ຫຼື ສິ່ງທີ່ເຈົ້າສາມາດຈິນຕະນາການໄດ້, ແຮງໄກທີ່ມັນຈະເປັນສິ່ງທີ່ເຈົ້າສາມາດສະຫຼຸບໄດ້, ມັນເປັນພຽງແຕ່ສິ່ງທີ່ເຈົ້າຈະສາມາດເຂົ້າໃຈໄດ້ເມື່ອຄວາມຈິງເກີດຂຶ້ນກັບເຈົ້າ. ບາງຄັ້ງ ແມ່ນແຕ່ເມື່ອພວກມັນເກີດຂຶ້ນ ເຈົ້າກໍຍັງບໍ່ສາມາດເຫັນໄດ້ຢ່າງຊັດເຈນ ແລະ ຜູ້ຄົນຈະບໍ່ເຂົ້າໃຈຈົນພຣະເຈົ້າເຮັດເປັນການສ່ວນຕົວເພື່ອນໍາຄວາມຊັດເຈນມາສູ່ຂໍ້ແທ້ຈິງຕົວຈິງຂອງສິ່ງທີ່ກໍາລັງເກີດຂຶ້ນ. ໃນເວລານັ້ນແມ່ນມີພາບລວງຕາຫຼາຍຢ່າງທ່າມກາງສາວົກທີ່ຕິດຕາມພຣະເຢຊູ. ພວກເຂົາເຊື່ອວ່າ ມື້ຂອງພຣະເຈົ້າເກືອບມາເຖິງແລ້ວ ແລະ ພວກເຂົາຈະຕາຍເພື່ອພຣະຜູ້ເປັນເຈົ້າໃນໄວໆນີ້ ແລະ ສາມາດພົບກັບພຣະເຢຊູເຈົ້າ. ເປໂຕລໍຖ້າເຈັດປີເຕັມ ຍ້ອນຄວາມຮູ້ສຶກນີ້, ແຕ່ມື້ນັ້ນກໍຍັງບໍ່ມາຈັກເທື່ອ. ພວກເຂົາຮູ້ສຶກວ່າຊີວິດຂອງພວກເຂົາໄດ້ເຕີບໃຫຍ່ແລ້ວ; ຄວາມຮູ້ສຶກທີ່ຢູ່ພາຍໃນພວກເຂົາທະວີຄູນ ແລະ ຄວາມຮູ້ສຶກເຫຼົ່ານີ້ຍິ່ງຖືກຕ້ອງຫຼາຍຂຶ້ນ, ແຕ່ພວກເຂົາພະເຊີນກັບຄວາມລົ້ມເຫຼວຫຼາຍຢ່າງ ແລະ ບໍ່ສາມາດເຮັດສໍາເລັດໄດ້. ພວກເຂົາເອງບໍ່ຮູ້ຈັກວ່າແມ່ນຫຍັງກໍາລັງເກີດຂຶ້ນ. ສິ່ງນັ້ນທີ່ມາຈາກພຣະວິນຍານບໍລິສຸດຈະບໍ່ສາມາດຖືກເຮັດໃຫ້ສໍາເລັດໄດ້ແທ້ບໍ? ຄວາມຮູ້ສຶກຂອງຜູ້ຄົນບໍ່ສາມາດເພິ່ງພາໄດ້. ຍ້ອນຜູ້ຄົນມີວິທີຄວາມຄິດ ແລະ ແນວຄິດຂອງພວກເຂົາເອງ, ພວກເຂົາຈຶ່ງສ້າງຄວາມຮັ່ງມີຂອງສະມາຄົມອີງຕາມບໍລິບົດ ແລະ ສະພາວະໃນເວລານັ້ນ. ໂດຍສະເພາະແລ້ວ, ເມື່ອບາງສິ່ງເກີດຂຶ້ນກັບຜູ້ຄົນທີ່ມີວິທີຄວາມຄິດດີ, ພວກເຂົາກໍຕື່ນເຕັ້ນເກີນໄປ ແລະ ບໍ່ສາມາດເຮັດຫຍັງໄດ້ນອກຈາກສ້າງຄວາມຮັ່ງມີຂອງສະມາຄົມ. ສິ່ງນີ້ໝາຍເຖິງ "ຜູ້ຊ່ຽວຊານ" ທີ່ມີຄວາມຮູ້ ແລະ ທິດສະດີທີ່ໂອ້ອວດໂດຍສະເພາະ ຜູ້ທີ່ມີສະມາຄົມເຊິ່ງອຸດົມສົມບູນຫຼາຍຂຶ້ນກວ່າເກົ່າຫຼັງຈາກໄດ້ພະເຊີນກັບທາງໂລກເປັນເວລາຫຼາຍປີ; ໂດຍທີ່ພວກເຂົາບໍ່ເຂົ້າໃຈໃນສິ່ງນັ້ນ, ພວກມັນກໍຈະຍຶດຄອງຫົວໃຈຂອງພວກເຂົາ ແລະ ກາຍເປັນຄວາມຮູ້ສຶກທີ່ມີອໍານາດທີ່ສຸດຂອງພວກເຂົາ ແລະ ພວກເຂົາກໍພໍໃຈກັບສິ່ງເຫຼົ່ານັ້ນ. ເມື່ອຜູ້ຄົນຕ້ອງການເຮັດບາງສິ່ງບາງຢ່າງ, ຄວາມຮູ້ສຶກ ແລະ ຈິນຕະນາການກໍຈະປາກົດຂຶ້ນພາຍໃນພວກເຂົາ ແລະ ພວກເຂົາກໍຈະຄິດວ່າພວກເຂົາຖືກຕ້ອງ. ຫຼັງຈາກນັ້ນ ເມື່ອສິ່ງເຫຼົ່ານັ້ນຍັງບໍ່ຖືກເຮັດໃຫ້ສໍາເລັດ, ຜູ້ຄົນກໍບໍ່ສາມາດບອກໄດ້ວ່າແມ່ນຫຍັງຜິດ. ບາງເທື່ອ ພວກເຂົາເຊື່ອວ່າພຣະເຈົ້າໄດ້ປ່ຽນແຜນຂອງພຣະອົງ.

ທຸກຄົນຈະມີຄວາມຮູ້ສຶກຢ່າງບໍ່ສາມາດຫຼີກເວັ້ນໄດ້. ໃນລະຫວ່າງຍຸກແຫ່ງພຣະບັນຍັດ, ຫຼາຍຄົນກໍຍັງມີຄວາມຮູ້ສຶກບາງຢ່າງ, ແຕ່ຄວາມຜິດພາດໃນຄວາມຮູ້ສຶກຂອງພວກເຂົາແມ່ນມີໜ້ອຍກວ່າຜູ້ຄົນໃນປັດຈຸບັນ. ນັ້ນກໍຍ້ອນວ່າເມື່ອກ່ອນ ຜູ້ຄົນສາມາດເຫັນການປາກົດຕົວຂອງພຣະເຢໂຮວາ; ພວກເຂົາສາມາດເຫັນຜູ້ສົ່ງຂ່າວ ແລະ ພວກເຂົາມີຄວາມຝັນ. ຜູ້ຄົນໃນປັດຈຸບັນບໍ່ສາມາດເຫັນນິມິດ ຫຼື ຜູ້ສົ່ງຂ່າວ ແລະ ສະນັ້ນ ຄວາມຜິດພາດໃນຄວາມຮູ້ສຶກຂອງພວກເຂົາຈຶ່ງທະວີຄູນຂຶ້ນ. ເມື່ອຜູ້ຄົນໃນປັດຈຸບັນຮູ້ສຶກວ່າ ບາງສິ່ງຖືກຕ້ອງໂດຍສະເພາະ ແລະ ນໍາເຂົ້າສູ່ການປະຕິບັດ, ພຣະວິນຍານບໍລິສຸດຈະບໍ່ຕັກເຕືອນພວກເຂົາ ແລະ ພວກເຂົາກໍຈະມີຄວາມສະຫງົບສຸກຢູ່ພາຍໃນຫຼາຍ. ໃນຄວາມເປັນຈິງແລ້ວ, ມັນແມ່ນຜ່ານທາງການສົນທະນາ ຫຼື ການອ່ານພຣະທໍາຂອງພຣະເຈົ້າເທົ່ານັ້ນ ພວກເຂົາຈຶ່ງໄດ້

ຄົ້ນພົບວ່າ ພວກເຂົາຜິດ. ລັກສະນະໜຶ່ງຢ່າງຂອງສິ່ງນີ້ກໍຄືບໍ່ມີຜູ້ສົ່ງຂ່າວປາກົດຕໍ່ຜູ້ຄົນ, ຄວາມຝັນກໍມີໜ້ອຍຫຼາຍ ແລະ ຜູ້ຄົນກໍບໍ່ເຫັນນິມິດຫຍັງໃນທ້ອງຟ້າ. ເຫດຜົນດ້ານອື່ນກໍຄືພຣະວິນຍານບໍລິສຸດບໍ່ໄດ້ເພີ່ມການຕັກເຕືອນ ແລະ ວິໄນຂອງພຣະອົງພາຍໃນຜູ້ຄົນ; ເກືອບບໍ່ມີພາລະກິດໃດເລີຍຂອງພຣະວິນຍານບໍລິສຸດຢູ່ພາຍໃນພວກເຂົາ. ສະນັ້ນ ຖ້າຜູ້ຄົນບໍ່ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ບໍ່ສະແຫວງຫາຄວາມຈິງໃນຫົນທາງຕົວຈິງ ແລະ ບໍ່ເຂົ້າໃຈເສັ້ນທາງແຫ່ງການປະຕິບັດ, ແລ້ວພວກເຂົາກໍຈະບໍ່ໄດ້ເກັບກ່ຽວຫຍັງເລີຍ. ຫຼັກການຂອງພາລະກິດຂອງພຣະວິນຍານບໍລິສຸດແມ່ນເປັນດັ່ງນີ້: ພຣະອົງບໍ່ສົນໃຈຕໍ່ສິ່ງທີ່ບໍ່ກ່ຽວຂ້ອງກັບພາລະກິດຂອງພຣະອົງ; ຖ້າບາງສິ່ງບໍ່ໄດ້ຢູ່ພາຍໃນຂອບເຂດແຫ່ງການປົກຄອງຂອງພຣະອົງ, ພຣະອົງກໍຈະບໍ່ເຂົ້າໄປຫຍຸ້ງກ່ຽວ ຫຼື ແຊກແຊງຢ່າງແນ່ນອນ, ເຮັດໃຫ້ຜູ້ຄົນສ້າງບັນຫາຕາມທີ່ພວກເຂົາປາຖະໜາ. ເຈົ້າສາມາດປະພຶດແບບໃດກໍໄດ້ຕາມທີ່ເຈົ້າຕ້ອງການ, ແຕ່ມື້ນັ້ນຈະມາເຖິງ ມື້ທີ່ເຈົ້າພົບວ່າຕົນເອງຕື່ນຕົກໃຈ ແລະ ເຮັດຫຍັງບໍ່ຖືກ. ພຣະເຈົ້າພຽງແຕ່ປະຕິບັດພາລະກິດຢ່າງຕັ້ງໃຈໃນເນື້ອໜັງຂອງພຣະອົງເອງ, ບໍ່ເຄີຍແຊກແຊງໃນພາລະກິດຂອງມະນຸດ. ກົງກັນຂ້າມ ພຣະອົງມອບບ່ອນພັກທີ່ກວ້າງໃຫຍ່ໃຫ້ກັບໂລກມະນຸດ ແລະ ປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດ. ເຈົ້າຈະບໍ່ຖືກຕັກເຕືອນ ຖ້າເຈົ້າເຮັດບາງສິ່ງຜິດໃນມື້ນີ້ ຫຼື ເຈົ້າຈະບໍ່ໄດ້ຮັບລາງວັນ ຖ້າເຈົ້າເຮັດບາງສິ່ງດີໃນມື້ອື່ນ. ສິ່ງເຫຼົ່ານີ້ແມ່ນເລື່ອງຂອງມະນຸດ ແລະ ບໍ່ມີຄວາມກ່ຽວພັນກັບພາລະກິດຂອງພຣະວິນຍານບໍລິສຸດແມ່ນແຕ່ໜ້ອຍດຽວ, ສິ່ງນີ້ບໍ່ໄດ້ຢູ່ພາຍໃນຂອບເຂດຂອງພາລະກິດຂອງເຮົາເລີຍ.

ໃນເວລານັ້ນ ເປໂຕກຳລັງປະຕິບັດພາລະກິດ, ເພິ່ນກ່າວຄຳເວົ້າຫຼາຍຢ່າງ ແລະ ປະຕິບັດພາລະກິດຫຼາຍຢ່າງ. ມັນເປັນໄປບໍ່ໄດ້ທີ່ວ່າ ບໍ່ມີຫຍັງໃນສິ່ງນັ້ນມາຈາກແນວຄິດຂອງມະນຸດ? ເພາະວ່າມັນເປັນໄປບໍ່ໄດ້ທີ່ສິ່ງນັ້ນຈະມາຈາກພຣະວິນຍານບໍລິສຸດ. ເປໂຕເປັນພຽງສິ່ງຖືກສ້າງຂອງພຣະເຈົ້າ, ເພິ່ນເປັນຜູ້ຕິດຕາມ, ເພິ່ນຄືເປໂຕ, ບໍ່ແມ່ນພຣະເຢຊູ ແລະ ແກ່ນແທ້ຂອງພວກເຂົາກໍບໍ່ຄືກັນ. ເຖິງແມ່ນເປໂຕຖືກສົ່ງໂດຍພຣະວິນຍານບໍລິສຸດ, ບໍ່ແມ່ນທຸກສິ່ງທີ່ເພິ່ນເຮັດມາຈາກພຣະວິນຍານບໍລິສຸດ, ຍ້ອນວ່າ ໃນທີ່ສຸດແລ້ວ ເພິ່ນກໍເປັນມະນຸດຄົນໜຶ່ງ. ໂປໂລໄດ້ກ່າວພຣະທຳຫຼາຍຂໍ້ ແລະ ຂຽນຈົດໝາຍໄປຫາຄຣິສຕະຈັກບໍ່ແມ່ນຈຳນວນໜ້ອຍໆ, ຈົດໝາຍບາງສະບັບຖືກເກັບກຳໄວ້ໃນພຣະຄຳພີ. ພຣະວິນຍານບໍລິສຸດບໍ່ໄດ້ສະແດງຄວາມຄິດເຫັນໃດເລີຍ, ຍ້ອນນັ້ນແມ່ນເວລາທີ່ໂປໂລກຳລັງຖືກໃຊ້ໂດຍພຣະວິນຍານບໍລິສຸດ. ເພິ່ນໄດ້ຮັບເອົາປະສົບການ ແລະ ຄວາມຮູ້ບາງຢ່າງ ແລະ ເພິ່ນຂຽນສິ່ງເຫຼົ່ານັ້ນລົງ ແລະ ສົ່ງຕໍ່ໃຫ້ກັບອ້າຍເອື້ອຍນ້ອງຂອງເພິ່ນທີ່ເຊື່ອໃນພຣະຜູ້ເປັນເຈົ້າ. ພຣະເຢຊູບໍ່ໄດ້ມີປະຕິກິລິຍາໃດເລີຍ. ເປັນຫຍັງພຣະວິນຍານບໍລິສຸດຈຶ່ງບໍ່ຂັດຂວາງເພິ່ນໃນເວລານັ້ນ? ມັນເປັນຍ້ອນມີຄວາມບໍ່ບໍລິສຸດບາງຢ່າງທີ່ ເກີດຈາກວິທີຄວາມຄິດທຳມະດາຂອງຜູ້ຄົນ; ສິ່ງນັ້ນບໍ່ສາມາດຫຼີກເວັ້ນໄດ້. ອີກຢ່າງການກະທຳຂອງເພິ່ນກໍບໍ່ໄດ້ໄປເຖິງຈຸດຂອງການແຊກແຊງ ຫຼື ການລົບກວນ. ເມື່ອມີພາລະກິດແຫ່ງຄວາມເປັນມະນຸດບາງຢ່າງໃນປະເພດນີ້, ຜູ້ຄົນພົບວ່າມັນງ່າຍກວ່າທີ່ຈະຍອມຮັບ. ຫາກວ່າຄວາມບໍ່ບໍລິສຸດໃນວິທີຄວາມຄິດທຳມະດາຂອງມະນຸດບໍ່ແຊກແຊງໃນສິ່ງໃດເລີຍ, ພວກມັນກໍຖືວ່າເປັນ

ປົກກະຕິ. ເວົ້າອີກຢ່າງກໍຄື ຜູ້ຄົນທີ່ມີວິທີຄວາມຄິດປົກກະຕິລ້ວນແລ້ວແຕ່ສາມາດຄິດໃນລັກສະນະນັ້ນ. ເມື່ອຜູ້ຄົນດຳລົງຊີວິດໃນເນື້ອໜັງ, ພວກເຂົາກໍມີວິທີຄວາມຄິດຂອງພວກເຂົາເອງ, ແຕ່ບໍ່ມີທາງທີ່ຈະກຳຈັດຄວາມຄິດເຫຼົ່ານີ້ອອກໄດ້. ເຖິງຢ່າງໃດກໍຕາມ ຫຼັງຈາກທີ່ໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າເປັນຊ່ວງເວລາໃດໜຶ່ງ ແລະ ເຂົ້າໃຈຄວາມຈິງບາງຢ່າງ, ມັນກໍຈະມີວິທີຄວາມຄິດເຫຼົ່ານີ້ທີ່ໜ້ອຍລົງ. ເມື່ອພວກເຂົາໄດ້ຜະເຊີນກັບຫຼາຍສິ່ງ, ພວກເຂົາກໍຈະສາມາດເຫັນໄດ້ຢ່າງຊັດເຈນ ແລະ ດ້ວຍເຫດນັ້ນກໍຈະແຊກແຊງໜ້ອຍລົງ. ເວົ້າອີກຢ່າງໜຶ່ງກໍຄື ເມື່ອຈິນຕະນາການ ແລະ ການແຊກແຊງດ້ານເຫດຜົນຂອງຜູ້ຄົນຖືກໂຕ້ແຍ້ງ, ຄວາມຮູ້ສຶກທີ່ບໍ່ປົກກະຕິຂອງພວກເຂົາກໍຈະໜ້ອຍລົງ. ຄົນທີ່ດຳລົງຊີວິດຢູ່ໃນເນື້ອໜັງລ້ວນແລ້ວແຕ່ມີວິທີຄວາມຄິດຂອງພວກເຂົາເອງ, ແຕ່ໃນທີ່ສຸດແລ້ວ ພຣະເຈົ້າຈະປັ້ນພວກເຂົາຈົນເຖິງຈຸດທີ່ວິທີຄວາມຄິດຂອງພວກເຂົາຈະບໍ່ສາມາດລົບກວນພວກເຂົາອີກຕໍ່ໄປ, ພວກເຂົາຈະບໍ່ສາມາດອາໄສຄວາມຮູ້ສຶກໃນຊີວິດຂອງພວກເຂົາ, ວຸດທິພາວະຕົວຈິງຂອງພວກເຂົາຈະເຕີບໃຫຍ່ ແລະ ພວກເຂົາຈະສາມາດດຳລົງຊີວິດໂດຍພຣະທຳຂອງພຣະເຈົ້າພາຍໃນຄວາມເປັນຈິງ ແລະ ຈະບໍ່ເຮັດສິ່ງຕ່າງໆທີ່ບໍ່ແຈ່ມແຈ້ງ ແລະ ວ່າງເປົ່າ ແລະ ຫຼັງຈາກນັ້ນ ພວກເຂົາກໍຈະບໍ່ເຮັດສິ່ງຕ່າງໆທີ່ກໍ່ໃຫ້ເກີດການລົບກວນ. ໃນລັກສະນະນີ້, ພາບລວງຕານີ້ຈຶ່ງຈະບໍ່ມີອີກຕໍ່ໄປ ແລະ ຕັ້ງແຕ່ນີ້ເປັນຕົ້ນໄປ ການກະທຳຂອງພວກເຂົາກໍຈະເປັນວຸດທິພາວະຕົວຈິງຂອງພວກເຂົາ.

# ເບື້ອງຫຼັງແທ້ຈິງຂອງ ພາລະກິດແຫ່ງການເອົາຊະນະ (1)

ເມື່ອຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮຸນແຮງ, ມະນຸດຊາດກໍບໍ່ຮູ້ຈັກວ່າມີພຣະເຈົ້າ ແລະ ຢຸດນະມັດສະການພຣະເຈົ້າ. ໃນຕອນເລີ່ມຕົ້ນ, ເມື່ອອາດາມ ແລະ ເອວາຖືກສ້າງ, ສະຫງ່າລາສີ ແລະ ຄຳພະຍານຂອງພຣະເຢໂຮວາກໍປາກົດຢູ່ສະເໝີ. ແຕ່ຫຼັງຈາກທີ່ຖືກເຮັດໃຫ້ເສື່ອມຊາມ, ມະນຸດກໍສູນເສຍສະຫງ່າລາສີ ແລະ ຄຳພະຍານ ຍ້ອນທຸກຄົນກະບົດຕໍ່ພຣະເຈົ້າ ແລະ ເຊົາເຄົາລົບນັບຖືພຣະອົງທັງສິ້ນ. ພາລະກິດແຫ່ງການເອົາຊະນະໃນປັດຈຸບັນແມ່ນເພື່ອຟື້ນຟູຄຳພະຍານທັງໝົດ ແລະ ສະຫງ່າລາສີທັງໝົດ ແລະ ເພື່ອເຮັດໃຫ້ມະນຸດທຸກຄົນນະມັດສະການພຣະເຈົ້າ, ເພື່ອວ່າຈະມີຄຳພະຍານຢູ່ທ່າມກາງສິ່ງທີ່ຖືກສ້າງ; ນີ້ແມ່ນພາລະກິດທີ່ຈະຖືກປະຕິບັດໃນລະຫວ່າງຂັ້ນຕອນນີ້. ມະນຸດຊາດຈະຖືກເອົາຊະນະແນວໃດກັນແທ້? ໂດຍໃຊ້ພາລະກິດແຫ່ງພຣະທຳໃນຂັ້ນຕອນນີ້ເພື່ອເຮັດໃຫ້ມະນຸດເຊື່ອຢ່າງສົມບູນ; ໂດຍໃຊ້ການເປີດເຜີຍ, ການພິພາກສາ, ການຂ້ຽນຕີ ແລະ ການສາບແຊ່ງຢ່າງໄຮ້ປານີເພື່ອຊັກຈູງເຂົາຢ່າງທີ່ສຸດ; ໂດຍເປີດໂປງຄວາມກະບົດຂອງມະນຸດ ແລະ ພິພາກສາການຕໍ່ຕ້ານຂອງເຂົາ ເພື່ອວ່າເຂົາອາດຮູ້ຈັກຄວາມບໍ່ຊອບທຳ ແລະ ຄວາມສົກກະປົກຂອງມະນຸດຊາດ ແລະ ດ້ວຍເຫດນັ້ນຈຶ່ງໃຊ້ສິ່ງເຫຼົ່ານີ້ເພື່ອເປັນສິ່ງສະແດງໃຫ້ເຫັນເຖິງອຸປະນິໄສອັນຊອບທຳຂອງພຣະເຈົ້າແຈ້ງຂຶ້ນ. ໂດຍສະເພາະຢ່າງຍິ່ງແມ່ນຜ່ານພຣະທຳເຫຼົ່ານີ້ ມະນຸດຈຶ່ງຖືກເອົາຊະນະ ແລະ ຖືກເຮັດໃຫ້ເຊື່ອຢ່າງສົມບູນ. ພຣະທຳແມ່ນວິທີໃນການເອົາຊະນະຂັ້ນສຸດທ້າຍຂອງມະນຸດຊາດ ແລະ ທຸກຄົນທີ່ຍອມຮັບການເອົາຊະນະຂອງພຣະເຈົ້າກໍຕ້ອງຍອມຮັບເອົາການຂ້ຽນຕີ ແລະ ການພິພາກສາແຫ່ງພຣະທຳຂອງພຣະອົງ. ຂະບວນການແຫ່ງການເອົາຊະນະໃນປັດຈຸບັນແມ່ນຂະບວນການແຫ່ງການກ່າວພຣະທຳຢ່າງແນ່ນອນ. ແລ້ວຜູ້ຄົນຄວນຮ່ວມມືແນວໃດ? ໂດຍຮູ້ຈັກວິທີການກິນ ແລະ ດື່ມພຣະທຳເຫຼົ່ານີ້ ແລະ ການບັນລຸຄວາມເຂົ້າໃຈກ່ຽວກັບພຣະທຳເຫຼົ່ານີ້. ແຕ່ສຳລັບວິທີທີ່ຜູ້ຄົນຈະຖືກເອົາຊະນະນັ້ນ, ນີ້ບໍ່ແມ່ນສິ່ງທີ່ພວກເຂົາສາມາດເຮັດດ້ວຍຕົນເອງໄດ້. ສິ່ງທີ່ເຈົ້າສາມາດເຮັດໄດ້ກໍມີພຽງແຕ່ການມາຮູ້ຈັກຄວາມເສື່ອມຊາມ ແລະ ຄວາມສົກກະປົກຂອງເຈົ້າ, ຄວາມກະບົດຂອງເຈົ້າ ແລະ ຄວາມບໍ່ຊອບທຳຂອງເຈົ້າຜ່ານການກິນ ແລະ ດື່ມພຣະທຳເຫຼົ່ານີ້ ແລະ ລົ້ມລົງຕໍ່ໜ້າພຣະເຈົ້າ. ຫຼັງຈາກທີ່ໄດ້ເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ຖ້າເຈົ້າສາມາດນຳຄວາມປະສົງນັ້ນເຂົ້າສູ່ການປະຕິບັດ ແລະ ຖ້າເຈົ້າມີນິມິດ ແລະ ສາມາດຍອມຕໍ່ພຣະທຳເຫຼົ່ານີ້ຢ່າງສົມບູນ ແລະ ບໍ່ຕັດສິນໃຈເລືອກດ້ວຍຕົນເອງ, ແລ້ວເຈົ້າກໍຈະຖືກເອົາຊະນະ ແລະ ມັນກໍເປັນຍ້ອນຜົນຂອງພຣະທຳເຫຼົ່ານີ້. ເປັນຫຍັງມະນຸດຊາດຈຶ່ງສູນເສຍຄຳພະຍານ? ເພາະບໍ່ມີໃຜມີຄວາມເຊື່ອໃນພຣະເຈົ້າ, ເພາະພຣະເຈົ້າບໍ່ມີພື້ນທີ່ໃນຫົວໃຈຂອງຜູ້ຄົນ. ການເອົາຊະນະມະນຸດຊາດແມ່ນການຟື້ນຟູຄວາມເຊື່ອຂອງມະນຸດຊາດ. ຜູ້ຄົນມັກຈະແລ່ນໂດຍບໍ່ຄິດສູ່ໂລກທີ່ທຳມະດາຢູ່ສະເໝີ, ພວກເຂົາບົ່ມຊ້ອນຄວາມຫວັງໄວ້ຫຼາຍເກີນໄປ, ຕ້ອງການສຳລັບອະນາຄົດຂອງພວກເຂົາຫຼາຍເກີນໄປ ແລະ ມີຄວາມຮຽກຮ້ອງຕ້ອງການທີ່ຟຸ່ມເຟືອຍຫຼາຍເກີນໄປ. ພວກເຂົາຄິດເຖິງເນື້ອໜັງ

ຢູ່ສະເໝີ, ວາງແຜນສຳລັບເນື້ອໜັງ ແລະ ບໍ່ສົນໃຈໃນການສະແຫວງຫາຫົນທາງແຫ່ງຄວາມເຊື່ອໃນພຣະເຈົ້າເລີຍ. ຫົວໃຈຂອງພວກເຂົາຖືກຊາຕານຍາດເອົາໄປ, ພວກເຂົາສູນເສຍຄວາມເຄົາລົບນັບຖືຂອງພວກເຂົາສຳລັບພຣະເຈົ້າ ແລະ ພວກເຂົາຕັ້ງຈິດຕັ້ງໃຈໃສ່ຊາຕານ. ແຕ່ມະນຸດຖືກພຣະເຈົ້າສ້າງຂຶ້ນມາ. ສະນັ້ນ ມະນຸດກໍໄດ້ສູນເສຍຄຳພະຍານ ໝາຍຄວາມວ່າເຂົາໄດ້ສູນເສຍສະຫງ່າລາສີຂອງພຣະເຈົ້າ. ເປົ້າໝາຍແຫ່ງການເອົາຊະນະມະນຸດຊາດແມ່ນເພື່ອຮຽກຄືນສະຫງ່າລາສີແຫ່ງຄວາມເຄົາລົບນັບຖືທີ່ມະນຸດມີສຳລັບພຣະເຈົ້າ. ມັນສາມາດເວົ້າໄດ້ໃນລັກສະນະນີ້: ມີຫຼາຍຄົນທີ່ບໍ່ສະແຫວງຫາຊີວິດ; ເຖິງແມ່ນວ່າມີບາງຄົນທີ່ສະແຫວງຫາຊີວິດ, ພວກເຂົາກໍມີພຽງແຕ່ຈຳນວນສ່ຳກຳມືໜຶ່ງເທົ່ານັ້ນ. ຜູ້ຄົນໝົກມຸ້ນຢູ່ກັບອະນາຄົດຂອງພວກເຂົາ ແລະ ບໍ່ສົນໃຈຫຍັງເລີຍຕໍ່ຊີວິດ. ບາງຄົນກະບົດ ແລະ ຕໍ່ຕ້ານພຣະເຈົ້າ, ຕັດສິນພຣະອົງຢູ່ລັບຫຼັງພຣະອົງ ແລະ ບໍ່ປະຕິບັດຄວາມຈິງ. ຜູ້ຄົນເຫຼົ່ານີ້ແມ່ນຈະຖືກເບິ່ງຂ້າມໃນຕອນນີ້; ສຳລັບຊ່ວງເວລານີ້, ບໍ່ມີຫຍັງທີ່ຈະປະຕິບັດກັບບຸດຊາຍແຫ່ງຄວາມກະບົດເຫຼົ່ານີ້, ແຕ່ໃນອະນາຄົດ ເຈົ້າຈະດຳລົງຊີວິດຢູ່ໃນຄວາມມືດມິດ, ຮ້ອງໄຫ້ ແລະ ກັດແຂ້ວຂອງເຈົ້າ. ເຈົ້າບໍ່ຮູ້ສຶກເຖິງຄວາມລ້ຳຄ່າຂອງແສງສະຫວ່າງເມື່ອເຈົ້າກຳລັງດຳລົງຊີວິດຢູ່ໃນແສງສະຫວ່າງນັ້ນ, ແຕ່ເຈົ້າຈະຮັບຮູ້ເຖິງຄວາມລ້ຳຄ່ານັ້ນ ຫຼັງຈາກທີ່ເຈົ້າໄດ້ດຳລົງຊີວິດໃນກາງຄືນທີ່ມືດມິດ ແລະ ເຈົ້າຈະເສຍໃຈໃນຕອນນັ້ນ. ເຈົ້າຮູ້ສຶກສະບາຍດີໃນຕອນນີ້, ແຕ່ມື້ທີ່ເຈົ້າເສຍໃຈກໍຈະມາເຖິງ. ເມື່ອມື້ນັ້ນມາເຖິງ ແລະ ຄວາມມືດມິດກໍລົງມາ ແລະ ແສງສະຫວ່າງບໍ່ມີອີກຕໍ່ໄປ, ມັນກໍຈະຊ້າເກີນໄປທີ່ຈະເສຍໃຈ. ມັນເປັນຍ້ອນເຈົ້າຍັງບໍ່ເຂົ້າໃຈພາລະກິດແຫ່ງປັດຈຸບັນ, ເຈົ້າຈຶ່ງລົ້ມເຫຼວທີ່ຈະຊື່ນຊົມເວລາທີ່ເຈົ້າມີໃນຕອນນີ້. ຫຼັງຈາກທີ່ພາລະກິດຂອງຈັກກະວານທັງປວງເລີ່ມຕົ້ນຂຶ້ນ ໝາຍຄວາມວ່າເມື່ອທຸກສິ່ງທີ່ເຮົາກຳລັງກ່າວໃນມື້ນີ້ໄດ້ກາຍເປັນຈິງ, ຫຼາຍຄົນກໍຈະຈັບຫົວຂອງພວກເຂົາ ແລະ ຮ້ອງໄຫ້ດ້ວຍນ້ຳຕາແຫ່ງຄວາມເຈັບປວດ. ແລ້ວໃນການເຮັດແບບນັ້ນ, ພວກເຂົາຈະບໍ່ຕົກລົງສູ່ຄວາມມືດມິດພ້ອມກັບການຮ້ອງໄຫ້ ແລະ ກັດແຂ້ວບໍ? ທຸກຄົນທີ່ສະແຫວງຫາຊີວິດຢ່າງແທ້ຈິງ ແລະ ຖືກເຮັດໃຫ້ສົມບູນແມ່ນສາມາດຖືກໃຊ້ໄດ້, ໃນຂະນະທີ່ບຸດຊາຍແຫ່ງຄວາມກະບົດທັງໝົດທີ່ບໍ່ເໝາະສົມໃນການຮັບໃຊ້ແມ່ນຈະຕົກລົງສູ່ຄວາມມືດມິດ. ພວກເຂົາຈະປາສະຈາກພາລະກິດຂອງພຣະວິນຍານບໍລິສຸດ ແລະ ຈະບໍ່ສາມາດເຂົ້າໃຈຫຍັງເລີຍ. ສະນັ້ນ ພວກເຂົາກໍຈະທໍລະມານດ້ວຍການຮ້ອງໄຫ້ສະອຶກສະອື້ນ ຍ້ອນຖືກໂຍນລົງສູ່ການລົງໂທດ. ຖ້າເຈົ້າກຽມພ້ອມເປັນຢ່າງດີໃນໄລຍະນີ້ຂອງພາລະກິດ ແລະ ເຈົ້າໄດ້ເຕີບໃຫຍ່ໃນຊີວິດຂອງເຈົ້າ, ແລ້ວເຈົ້າກໍເໝາະສົມທີ່ຈະຖືກໃຊ້. ຖ້າເຈົ້າບໍ່ໄດ້ກຽມພ້ອມເປັນຢ່າງດີ, ແລ້ວເຖິງແມ່ນເຈົ້າຖືກເອີ້ນເຂົ້າຮ່ວມໃນຂັ້ນຕອນຕໍ່ໄປຂອງພາລະກິດ, ເຈົ້າກໍຈະບໍ່ເໝາະສົມທີ່ຈະຖືກນຳໃຊ້, ໃນຈຸດນີ້ ເຈົ້າຈະບໍ່ມີໂອກາດອີກ ເຖິງແມ່ນເຈົ້າປາຖະໜາທີ່ຈະກຽມຕົວເອງໃຫ້ພ້ອມ. ພຣະເຈົ້າແມ່ນໄດ້ຈາກໄປແລ້ວ; ເຈົ້າຈະສາມາດຊອກຫາໂອກາດແບບນີ້ຢູ່ຕໍ່ໜ້າເຈົ້າໃນຕອນນີ້ໄດ້ຢູ່ໃສ? ເຈົ້າຈະສາມາດຮັບເອົາການຝຶກຝົນທີ່ພຣະເຈົ້າຈັດໃຫ້ເປັນການສ່ວນຕົວໄດ້ຢູ່ໃສ? ໃນຕອນນັ້ນ, ພຣະເຈົ້າກໍຈະບໍ່ກ່າວເປັນການສ່ວນຕົວ ຫຼື ສະແດງສຽງຂອງພຣະອົງ; ສິ່ງທີ່ເຈົ້າຈະສາມາດເຮັດໄດ້ກໍຄືອ່ານສິ່ງທີ່ໄດ້ຖືກກ່າວໃນມື້ນີ້, ແລ້ວຄວາມເຂົ້າໃຈຈະເກີດຂຶ້ນງ່າຍໆໄດ້ແນວໃດ? ຊີວິດໃນ

ອະນາຄົດຈະດີກວ່າທີ່ມັນເປັນຢູ່ໃນປັດຈຸບັນໄດ້ແນວໃດ? ໃນຈຸດນັ້ນ, ເຈົ້າຈະບໍ່ທົນທຸກກັບການຕາຍທັງເປັນ ໃນຂະນະທີ່ເຈົ້າຮ້ອງໄຫ້ ແລະ ກັດແຂ້ວຂອງເຈົ້າບໍ? ພອນຕ່າງໆແມ່ນຖືກປະທານໃຫ້ກັບເຈົ້າໃນຕອນນີ້, ແຕ່ເຈົ້າບໍ່ຮູ້ວິທີຮັບເອົາພອນເຫຼົ່ານັ້ນ; ເຈົ້າກຳລັງດຳລົງຊີວິດຢູ່ໃນຄວາມຜາສຸກ, ແຕ່ເຈົ້າກໍຍັງບໍ່ຮູ້ສຶກຕົວ. ສິ່ງນີ້ພິສູດວ່າເຈົ້າໄດ້ຖືກກຳນົດໃຫ້ທໍລະມານແລ້ວ! ໃນປັດຈຸບັນ, ບາງຄົນຕໍ່ຕ້ານ, ບາງຄົນກະບົດ, ບາງຄົນເຮັດນັ້ນເຮັດນີ້ ແລະ ເຮົາພຽງແຕ່ບໍ່ສົນໃຈມັນ, ແຕ່ຢ່າຄິດວ່າເຮົາບໍ່ຮູ້ເຖິງສິ່ງທີ່ເຈົ້າກຳລັງເຮັດ. ເຮົາບໍ່ເຂົ້າໃຈທາດແທ້ຂອງພວກເຈົ້າບໍ? ເປັນຫຍັງຈຶ່ງສືບຕໍ່ຂັດແຍ້ງກັບເຮົາ? ເຈົ້າບໍ່ໄດ້ເຊື່ອໃນພຣະເຈົ້າເພື່ອສະແຫວງຫາຊີວິດ ແລະ ພອນສຳລັບຕົວເຈົ້າເອງບໍ? ມັນບໍ່ແມ່ນເພື່ອຕົວເຈົ້າເອງບໍ ເຈົ້າຈຶ່ງມີຄວາມເຊື່ອ? ໃນຊ່ວງເວລາປັດຈຸບັນ, ເຮົາກຳລັງປະຕິບັດພາລະກິດແຫ່ງການເອົາຊະນະໂດຍການກ່າວພຣະທຳເທົ່ານັ້ນ ແລະ ຫຼັງຈາກທີ່ພາລະກິດແຫ່ງການເອົາຊະນະນີ້ມາເຖິງຈຸດສິ້ນສຸດ, ຕອນຈົບຂອງເຈົ້າກໍຈະຊັດເຈນຂຶ້ນ. ເຮົາຈຳເປັນຕ້ອງບອກເຈົ້າຢ່າງແຈ່ມແຈ້ງບໍ?

ພາລະກິດແຫ່ງການເອົາຊະນະໃນປັດຈຸບັນແມ່ນມີເຈດຕະນາເຮັດໃຫ້ຈຸດຈົບຂອງມະນຸດຈົບລົງດ້ວຍວິທີໃດ. ເປັນຫຍັງມັນຈຶ່ງເວົ້າວ່າການຂ້ຽນຕີ ແລະ ການພິພາກສາໃນປັດຈຸບັນແມ່ນການພິພາກສາຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່ຂອງຍຸກສຸດທ້າຍ? ເຈົ້າບໍ່ເຂົ້າໃຈໃນສິ່ງນີ້ບໍ? ເປັນຫຍັງພາລະກິດແຫ່ງການເອົາຊະນະຈຶ່ງເປັນຂັ້ນຕອນສຸດທ້າຍ? ມັນບໍ່ແມ່ນເພື່ອເຮັດໃຫ້ປາກົດແຈ້ງຂຶ້ນວ່າມະນຸດແຕ່ລະຊົນຊັ້ນຈະພົບກັບຈຸດຈົບແບບໃດບໍ? ໃນຊ່ວງເວລາຂອງພາລະກິດແຫ່ງການເອົາຊະນະໂດຍການຂ້ຽນຕີ ແລະ ການພິພາກສາ, ມັນບໍ່ແມ່ນເພື່ອເຮັດໃຫ້ທຸກຄົນສະແດງທາດແທ້ຂອງພວກເຂົາ ແລະ ຫຼັງຈາກນັ້ນຕໍ່ມາກໍຖືກຈັດແບ່ງຕາມປະເພດຂອງພວກເຂົາບໍ? ແທນທີ່ຈະເວົ້າວ່ານີ້ແມ່ນການເອົາຊະນະມະນຸດຊາດ, ມັນອາດດີກວ່າທີ່ຈະເວົ້າວ່າ ສິ່ງນີ້ແມ່ນສະແດງເຖິງວິທີຈົບສິ້ນຂອງແຕ່ລະຊົນຄົນ. ນີ້ແມ່ນກ່ຽວກັບການພິພາກສາຄວາມບາບຂອງຜູ້ຄົນ ແລະ ຫຼັງຈາກນັ້ນກໍເປີດເຜີຍຊົນຊັ້ນຕ່າງໆຂອງຄົນ, ແລ້ວສຸດທ້າຍກໍຕັດສິນວ່າພວກເຂົາຊົ່ວຮ້າຍ ຫຼື ຊອບທຳ. ຫຼັງຈາກພາລະກິດແຫ່ງການເອົາຊະນະ, ກໍມີພາລະກິດແຫ່ງການໃຫ້ລາງວັນຄົນດີ ແລະ ລົງໂທດຄົນຊົ່ວຮ້າຍ. ຜູ້ຄົນທີ່ເຊື່ອຟັງຢ່າງສົມບູນໝາຍເຖິງຄົນທີ່ຖືກເອົາຊະນະແທ້ໆ ແມ່ນຈະຖືກວາງໄວ້ໃນບາດກ້າວຕໍ່ໄປຂອງການເຜີຍແຜ່ພາລະກິດຂອງພຣະເຈົ້າຕໍ່ຈັກກະວານທັງປວງ; ຜູ້ທີ່ບໍ່ໄດ້ຖືກເອົາຊະນະກໍຈະຖືກວາງໄວ້ໃນຄວາມມືດມົດ ແລະ ຈະພົບກັບໄພພິບັດ. ສະນັ້ນ ມະນຸດຈຶ່ງຈະຖືກຈັດແບ່ງອອກຕາມປະເພດຂອງເຂົາ, ພວກທີ່ເຮັດຊົ່ວກໍຈະຖືກຮວມຢູ່ກັບກຸ່ມຄົນຊົ່ວຮ້າຍ ເຊິ່ງຈະບໍ່ມີແສງຕາເວັນອີກຕໍ່ໄປ ແລະ ພວກທີ່ມີຄວາມຊອບທຳກໍຈະຖືກຮວມຢູ່ກັບກຸ່ມຄົນດີ ເພື່ອຮັບເອົາແສງສະຫວ່າງ ແລະ ດຳລົງຊີວິດຢູ່ໃນແສງສະຫວ່າງຕະຫຼອດໄປ. ຈຸດຈົບສຳລັບທຸກສິ່ງແມ່ນໃກ້ເຂົ້າມາແລ້ວ; ຈຸດຈົບຂອງມະນຸດແມ່ນຖືກສະແດງຢ່າງຊັດເຈນຕໍ່ໜ້າຂອງເຂົາ ແລະ ທຸກສິ່ງຈະຖືກຈັດແບ່ງຕາມປະເພດຂອງເຂົາ. ແລ້ວຜູ້ຄົນຈະສາມາດຫຼົບໜີຈາກຄວາມເຈັບປວດໃນການຈັດແບ່ງແຕ່ລະຄົນຕາມປະເພດໄດ້ແນວໃດ? ຈຸດຈົບຂອງບຸກຄົນທຸກປະເພດຈະຖືກເປີດເຜີຍ ເມື່ອຈຸດຈົບຂອງທຸກສິ່ງໃກ້ມາເຖິງ ແລະ ສິ່ງນີ້ແມ່ນຖືກປະຕິບັດໃນລະຫວ່າງພາລະກິດແຫ່ງການເອົາຊະນະຈັກກະວານທັງປວງ (ລວມເຖິງພາລະກິດແຫ່ງການເອົາຊະນະທັງໝົດ,

ເລີ່ມຕົ້ນດ້ວຍພາລະກິດໃນປັດຈຸບັນ). ການເປີດເຜີຍຈຸດຈົບຂອງມະນຸດຊາດທັງປວງແມ່ນຖືກປະຕິບັດຕໍ່ໜ້າບັນລັງແຫ່ງການພິພາກສາ, ໃນລະຫວ່າງການຂ້ຽນຕີ ແລະ ໃນລະຫວ່າງພາລະກິດແຫ່ງການເອົາຊະນະໃນຍຸກສຸດທ້າຍ. ການຈັດແບ່ງຜູ້ຄົນຕາມປະເພດບໍ່ແມ່ນການສົ່ງຜູ້ຄົນຄືນສູ່ຊົນຊັ້ນເດີມຂອງພວກເຂົາ, ຍ້ອນໃນເວລາທີ່ມະນຸດຖືກສ້າງນັ້ນ, ມີມະນຸດພຽງແຕ່ປະເພດດຽວ ທີ່ແບ່ງແຍກອອກເປັນຜູ້ຊາຍ ແລະ ແມ່ຍິງ. ບໍ່ໄດ້ມີຜູ້ຄົນຫຼາຍປະເພດທີ່ແຕກຕ່າງກັນ. ພຽງແຕ່ຫຼັງຈາກເວລາສອງສາມພັນປີແຫ່ງຄວາມເສື່ອມຊາມ, ຊົນຊັ້ນທີ່ແຕກຕ່າງກັນຂອງມະນຸດຈຶ່ງປາກົດຂຶ້ນ ໂດຍບາງຄົນກໍຢູ່ພາຍໃຕ້ອິດທິພົນຂອງຜີຮ້າຍທີ່ສົກກະປົກ, ບາງຄົນກໍຢູ່ພາຍໃຕ້ອິດທິພົນຂອງຜີຮ້າຍທີ່ຊົ່ວຮ້າຍ ແລະ ບາງຄົນເຊິ່ງເປັນຄົນທີ່ສະແຫວງຫາຫົນທາງແຫ່ງຊີວິດກໍຢູ່ພາຍໃຕ້ອິດທິພົນຂອງອົງຊົງລິດທານຸພາບສູງສຸດ. ດ້ວຍລັກສະນະນີ້ເທົ່ານັ້ນ ຊົນຊັ້ນຕ່າງໆຈຶ່ງເກີດຂຶ້ນເທື່ອລະໜ້ອຍຢູ່ທ່າມກາງຜູ້ຄົນ ແລະ ພຽງແຕ່ດ້ວຍເຫດນັ້ນ ຜູ້ຄົນຈຶ່ງແຍກອອກເປັນຊົນຊັ້ນຕ່າງໆພາຍໃນຄອບໃຫຍ່ຂອງມະນຸດ. ຜູ້ຄົນລ້ວນແລ້ວແຕ່ມີ "ບິດາ" ທີ່ແຕກຕ່າງກັນ; ມັນບໍ່ແມ່ນຄວາມຈິງທີ່ທຸກຄົນຢູ່ພາຍໃຕ້ອິດທິພົນຂອງອົງຊົງລິດທານຸພາບສູງສຸດທັງສິ້ນ, ຍ້ອນມະນຸດກະບົດເກີນໄປ. ການພິພາກສາທີ່ຊອບທຳເປີດໂປງຕົວຕົນທີ່ແທ້ຈິງຂອງຄົນແຕ່ລະປະເພດ ໂດຍບໍ່ປິດບັງຫຍັງທັງສິ້ນ. ທຸກຄົນສະແດງໃບໜ້າທີ່ແທ້ຈິງຂອງພວກເຂົາໃນແສງສະຫວ່າງ. ໃນຈຸດນີ້, ມະນຸດແມ່ນບໍ່ໄດ້ເປັນແບບທີ່ເຂົາເປັນໃນເມື່ອກ່ອນອີກຕໍ່ໄປ; ລັກສະນະດັ້ງເດີມຂອງບັນພະບຸລຸດຂອງເຂົາແມ່ນຫາຍໄປແຕ່ດົນແລ້ວ, ຍ້ອນເຊື້ອສາຍທີ່ນັບບໍ່ຖ້ວນຂອງອາດາມ ແລະ ເອວາແມ່ນໄດ້ຖືກຊາຕານຈັບກຸມຕັ້ງແຕ່ດົນແລ້ວ, ບໍ່ຮູ້ຈັກສະຫວັນ ແລະ ຕາເວັນອີກຕໍ່ໄປ ແລະ ຍ້ອນຜູ້ຄົນເຕັມໄປດ້ວຍພິດທຸກຮູບແບບຂອງຊາຕານ. ສະນັ້ນ ຜູ້ຄົນຈຶ່ງມີຈຸດໝາຍປາຍທາງທີ່ເໝາະສົມຂອງພວກເຂົາ. ຍິ່ງໄປກວ່ານັ້ນ ບົນພື້ນຖານຂອງພິດທີ່ແຕກຕ່າງກັນຂອງພວກເຂົາ ພວກເຂົາຈຶ່ງຖືກຈັດແບ່ງຕາມປະເພດ ໝາຍຄວາມວ່າພວກເຂົາຖືກຈັດອອກອີງຕາມຂອບເຂດທີ່ພວກເຂົາຖືກເອົາຊະນະໃນປັດຈຸບັນ. ຈຸດຈົບຂອງມະນຸດບໍ່ແມ່ນສິ່ງທີ່ຖືກກຳນົດໄວ້ລ່ວງໜ້າຕັ້ງແຕ່ການເນລະມິດສ້າງໂລກ. ນັ້ນກໍຍ້ອນວ່າ ໃນຕອນເລີ່ມຕົ້ນ, ມີພຽງຊົນຊັ້ນດຽວ ເຊິ່ງຖືກເອີ້ນລວມກັນວ່າ "ມະນຸດຊາດ" ແລະ ມະນຸດແມ່ນບໍ່ໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມຕັ້ງແຕ່ຕົ້ນ ແລະ ຜູ້ຄົນລ້ວນແລ້ວແຕ່ດຳລົງຊີວິດໃນແສງສະຫວ່າງຂອງພຣະເຈົ້າ ໂດຍບໍ່ມີຄວາມມືດມົວບັງເກີດຂຶ້ນກັບພວກເຂົາ. ແຕ່ຫຼັງຈາກທີ່ມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ, ຄົນທຸກຮູບແບບ ແລະ ທຸກປະເພດຈຶ່ງແຜ່ຂະຫຍາຍໄປທົ່ວແຜ່ນດິນໂລກ, ຄົນທຸກຮູບແບບ ແລະ ທຸກປະເພດທີ່ມາຈາກຄອບຄົວທີ່ເອີ້ນລວມກັນວ່າ "ມະນຸດຊາດ" ເຊິ່ງປະກອບດ້ວຍຜູ້ຊາຍ ແລະ ແມ່ຍິງ. ພວກເຂົາລ້ວນແລ້ວແຕ່ຖືກນຳພາໂດຍບັນພະບຸລຸດຂອງພວກເຂົາໃຫ້ຫັນເຫໄປຈາກບັນພະບຸລຸດທີ່ເກົ່າແກ່ທີ່ສຸດຂອງພວກເຂົາ ກໍຄືມະນຸດຊາດທີ່ປະກອບດ້ວຍຜູ້ຊາຍ ແລະ ແມ່ຍິງ (ນັ້ນກໍຄື ອາດາມ ແລະ ເອວາໃນຕອນເລີ່ມຕົ້ນ, ບັນພະບຸລຸດທີ່ເກົ່າແກ່ທີ່ສຸດຂອງພວກເຂົາ). ໃນເວລານັ້ນ, ຊາວອິດສະຣາເອນຄືຊົນຊາດດຽວທີ່ຖືກພຣະເຢໂຮວານຳພາຊີວິດເທິງແຜ່ນດິນໂລກ. ແລ້ວຄົນປະເພດຕ່າງໆທີ່ເກີດມາຈາກອິດສະຣາເອນທັງໝົດ (ໝາຍເຖິງ ມາຈາກຊົນເຜົ່າຂອງຄອບຄົວເດີມ) ກໍໄດ້ສູນເສຍການນຳພາຂອງພຣະເຢໂຮວາ. ຜູ້ຄົນເຫຼົ່ານີ້ທີ່ຢູ່ໃນສະໄໝ

ກ່ອນ ບໍ່ຮູ້ຈັກເຖິງເລື່ອງຕ່າງໆຂອງໂລກມະນຸດທັງສິ້ນ ຈຶ່ງເຫັນດ້ວຍກັບບັນພະບຸລຸດຂອງພວກເຂົາ ແລ້ວພາກັນດໍາລົງຊີວິດໃນເຂດແດນທີ່ພວກເຂົາອ້າງສິດ ເຊິ່ງໄດ້ສືບຕໍ່ກັນມາຈົນເຖິງປັດຈຸບັນນີ້. ສະນັ້ນ ພວກເຂົາຍັງບໍ່ຮູ້ຈັກວ່າພວກເຂົາຫັນເຫໄປຈາກພຣະເຢໂຮວາໄດ້ແນວໃດ ແລະ ພວກເຂົາຖືກມານຮ້າຍທີ່ສົກກະປົກທຸກຮູບແບບ ແລະ ວິນຍານຊົ່ວຮ້າຍເຮັດໃຫ້ເສື່ອມຊາມຈົນເຖິງປັດຈຸບັນນີ້ໄດ້ແນວໃດ. ຄົນທີ່ຖືກເຮັດໃຫ້ເສື່ອມຊາມຢ່າງຮຸນແຮງ ແລະ ຖືກໃສ່ພິດຈົນເຖິງປັດຈຸບັນນີ້ ກໍຄືຄົນທີ່ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ໃນທີ່ສຸດ ແລະ ຈະບໍ່ມີທາງເລືອກ ນອກຈາກເຫັນດ້ວຍກັບບັນພະບຸລຸດຂອງພວກເຂົາ ເຊິ່ງເປັນມານຮ້າຍສົກກະປົກທີ່ເຮັດໃຫ້ພວກເຂົາເສື່ອມຊາມ. ຄົນທີ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ໃນທີ່ສຸດກໍຈະໄປສູ່ຈຸດໝາຍປາຍທາງທີ່ເໝາະສົມຂອງມະນຸດຊາດ ໝາຍເຖິງ ໄປສູ່ຈຸດຈົບທີ່ສະຫງວນໄວ້ໃຫ້ກັບຄົນທີ່ຖືກຊ່ວຍໃຫ້ລອດພົ້ນ ແລະ ຄົນທີ່ຖືກເອົາຊະນະ. ທຸກສິ່ງແມ່ນຈະຖືກປະຕິບັດເພື່ອຊ່ວຍທຸກຄົນທີ່ສາມາດຊ່ວຍໃຫ້ລອດພົ້ນໄດ້, ແຕ່ສໍາລັບຄົນທີ່ຕາຍດ້ານ ແລະ ບໍ່ສາມາດປິ່ນປົວໄດ້ນັ້ນ, ທາງເລືອກດຽວຂອງພວກເຂົາກໍຈະເປັນການຕິດຕາມບັນພະບຸລຸດຂອງພວກເຂົາສູ່ເຫວເລິກແຫ່ງການຂ້ຽນຕີຢ່າງບໍ່ສິ້ນສຸດ. ຢ່າຄິດວ່າຈຸດຈົບຂອງເຈົ້າຖືກກໍານົດໄວ້ລ່ວງໜ້າໃນຕອນເລີ່ມຕົ້ນ ແລະ ຫາກໍຖືກເປີດເຜີຍໃນຕອນນີ້. ຖ້າເຈົ້າຄິດໃນລັກສະນະນັ້ນ, ແລ້ວເຈົ້າກໍລືມໄປວ່າ ໃນລະຫວ່າງການເນລະມິດສ້າງມະນຸດຊາດໃນເບື້ອງຕົ້ນນັ້ນ, ຊົນຊັ້ນຂອງຊາຕານແມ່ນບໍ່ໄດ້ຖືກສ້າງຂຶ້ນຕ່າງຫາກ? ເຈົ້າລືມແລ້ວບໍວ່າ ມີພຽງມະນຸດຊາດໜຶ່ງດຽວທີ່ຖືກສ້າງຂຶ້ນ ເຊິ່ງປະກອບດ້ວຍອາດາມ ແລະ ເອວາ (ໝາຍເຖິງ ມີພຽງຜູ້ຊາຍ ແລະ ແມ່ຍິງທີ່ຖືກສ້າງຂຶ້ນ?) ຖ້າເຈົ້າເປັນເຊື້ອສາຍຂອງຊາຕານໃນຕອນເລີ່ມຕົ້ນ, ສິ່ງນີ້ຈະບໍ່ໝາຍຄວາມວ່າເມື່ອພຣະເຢໂຮວາສ້າງມະນຸດ, ພຣະອົງໄດ້ລວມກຸ່ມຂອງຊາຕານໄວ້ໃນການເນລະມິດສ້າງຂອງພຣະອົງບໍ? ພຣະອົງຈະເຮັດແບບນັ້ນໄດ້ບໍ? ບໍ່, ພຣະອົງສ້າງມະນຸດຍ້ອນເຫັນແກ່ຄໍາພະຍານຂອງພຣະອົງ; ພຣະອົງສ້າງມະນຸດຍ້ອນເຫັນແກ່ສະຫງ່າລາສີຂອງພຣະອົງ. ເປັນຫຍັງພຣະອົງຈຶ່ງຈະເຈດຕະນາສ້າງຊົນຊັ້ນໜຶ່ງຂອງລູກຫຼານຂອງຊາຕານເພື່ອໃຫ້ຕັ້ງໃຈຕໍ່ຕ້ານພຣະອົງ? ພຣະເຢໂຮວາຈະເຮັດສິ່ງດັ່ງກ່າວໄດ້ແນວໃດ? ຖ້າພຣະອົງໄດ້ເຮັດແບບນັ້ນ, ຜູ້ໃດຈະເວົ້າວ່າພຣະອົງເປັນພຣະເຈົ້າທີ່ຊອບທໍາ? ເມື່ອເຮົາເວົ້າໃນຕອນນີ້ວ່າ ພວກເຈົ້າບາງຄົນຈະໄປກັບຊາຕານໃນຕອນສຸດທ້າຍ, ມັນບໍ່ໄດ້ໝາຍຄວາມວ່າ ເຈົ້າຢູ່ກັບຊາຕານຕັ້ງແຕ່ຕອນເລີ່ມຕົ້ນ; ກົງກັນຂ້າມມັນໝາຍຄວາມວ່າ ເຈົ້າໄດ້ຈົມລົງເລິກຫຼາຍ, ເຖິງແມ່ນພຣະເຈົ້າພະຍາຍາມຊ່ວຍເຈົ້າໃຫ້ລອດພົ້ນ, ເຈົ້າກໍຍັງບໍ່ສາມາດໄດ້ຮັບຄວາມລອດພົ້ນນັ້ນ. ບໍ່ມີທາງເລືອກອື່ນ ນອກຈາກຈະຈັດປະເພດໃຫ້ເຈົ້າຢູ່ກັບຊາຕານ. ນີ້ກໍຍ້ອນວ່າເຈົ້າຢູ່ໄກຈາກຄວາມລອດພົ້ນຫຼາຍ, ບໍ່ແມ່ນຍ້ອນພຣະເຈົ້າບໍ່ຊອບທໍາຕໍ່ເຈົ້າ ແລະ ເຈດຕະນາດັດແປງຊະຕາຂອງເຈົ້າໃຫ້ເປັນຮູບຮ່າງຂອງຊາຕານ ແລະ ຫຼັງຈາກນັ້ນກໍຈັດປະເພດເຈົ້າໃຫ້ຢູ່ກັບຊາຕານ ແລະ ມີຈຸດປະສົງຕ້ອງການໃຫ້ເຈົ້າທົນທຸກ. ນີ້ບໍ່ແມ່ນເບື້ອງຫຼັງທີ່ແທ້ຈິງຂອງພາລະກິດແຫ່ງການເອົາຊະນະ. ຖ້ານັ້ນແມ່ນສິ່ງທີ່ເຈົ້າເຊື່ອ, ແລ້ວຄວາມເຂົ້າໃຈຂອງເຈົ້າກໍລໍາອຽງຫຼາຍ. ຂັ້ນຕອນສຸດທ້າຍຂອງການເອົາຊະນະໝາຍເຖິງການຊ່ວຍຜູ້ຄົນໃຫ້ລອດພົ້ນ ແລະ ຍັງເປັນການເປີດເຜີຍຈຸດຈົບຂອງພວກເຂົາ. ມັນແມ່ນການເປີດໂປງຄວາມເສື່ອມໂຊມຂອງຜູ້ຄົນຜ່ານການ

ພິພາກສາ, ແລ້ວກໍເຮັດໃຫ້ພວກເຂົາກັບໃຈ, ລຸກຂຶ້ນ ແລະ ສະແຫວງຫາຊີວິດ ແລະ ເສັ້ນທາງທີ່ຖືກຕ້ອງຂອງຊີວິດມະນຸດ. ມັນແມ່ນການປຸກຫົວໃຈຂອງຄົນທີ່ດ້ານຊາ ແລະ ໂງ່ຈ້າ ແລະ ສະແດງເຖິງຄວາມກະບົດພາຍໃນພວກເຂົາຜ່ານທາງການພິພາກສາ. ເຖິງຢ່າງໃດກໍຕາມ, ຖ້າຜູ້ຄົນຍັງບໍ່ສາມາດກັບໃຈໄດ້, ຍັງບໍ່ສາມາດສະແຫວງຫາເສັ້ນທາງທີ່ຖືກຕ້ອງຂອງຊີວິດມະນຸດ ແລະ ບໍ່ສາມາດປະຖິ້ມຄວາມເສື່ອມຊາມເຫຼົ່ານີ້, ແລ້ວພວກເຂົາກໍຢູ່ໄກຈາກຄວາມລອດພົ້ນ ແລະ ຈະຖືກກືນກິນໂດຍຊາຕານ. ສິ່ງດັ່ງກ່າວແມ່ນຄວາມໝາຍຂອງການເອົາຊະນະຂອງພຣະເຈົ້າ: ການຊ່ວຍຜູ້ຄົນໃຫ້ລອດພົ້ນ ແລະ ຍັງເປັນການສະແດງເຖິງຈຸດຈົບຂອງພວກເຂົາ. ຈຸດຈົບທີ່ດີ, ຈຸດຈົບທີ່ບໍ່ດີ, ພວກມັນລ້ວນແລ້ວແຕ່ຖືກເປີດເຜີຍໂດຍພາລະກິດແຫ່ງການເອົາຊະນະ. ບໍ່ວ່າຜູ້ຄົນຈະຖືກຊ່ວຍໃຫ້ລອດພົ້ນ ຫຼື ຖືກສາບແຊ່ງກໍລ້ວນແລ້ວແຕ່ຖືກເປີດເຜີຍໃນລະຫວ່າງພາລະກິດແຫ່ງການເອົາຊະນະ.

ຍຸກສຸດທ້າຍແມ່ນເວລາທີ່ທຸກສິ່ງຈະຖືກຈັດແບ່ງຕາມປະເພດໂດຍຜ່ານການເອົາຊະນະ. ການເອົາຊະນະແມ່ນພາລະກິດຂອງຍຸກສຸດທ້າຍ; ເວົ້າອີກຢ່າງໜຶ່ງກໍຄື ການຕັດສິນຄວາມບາບຂອງແຕ່ລະຄົນແມ່ນພາລະກິດຂອງຍຸກສຸດທ້າຍ. ບໍ່ດັ່ງນັ້ນ ຜູ້ຄົນຈະຖືກຈັດແບ່ງໄດ້ແນວໃດ? ພາລະກິດແຫ່ງການຈັດແບ່ງປະເພດທີ່ຖືກປະຕິບັດໃນທ່າມກາງພວກເຈົ້າແມ່ນຈຸດເລີ່ມຕົ້ນຂອງພາລະກິດດັ່ງກ່າວໃນຈັກກະວານທັງປວງ. ຫຼັງຈາກນີ້, ຜູ້ຄົນເຫຼົ່ານັ້ນຈາກດິນແດນທັງປວງ ແລະ ທຸກຄົນກໍຍັງຈະຢູ່ພາຍໃຕ້ພາລະກິດແຫ່ງການເອົາຊະນະອີກດ້ວຍ. ນີ້ໝາຍຄວາມວ່າທຸກຄົນທີ່ຢູ່ໃນການເນລະມິດສ້າງຈະຖືກຈັດແບ່ງອອກຕາມປະເພດຂອງເຂົາ ໂດຍຍອມຢູ່ຕໍ່ໜ້າບັນລັງແຫ່ງການພິພາກສາເພື່ອຮັບເອົາການພິພາກສາ. ບໍ່ມີຜູ້ໃດ ແລະ ບໍ່ມີສິ່ງໃດສາມາດຫຼີກໜີການທົນທຸກຈາກການຂ້ຽນຕີ ແລະ ການພິພາກສານີ້ໄດ້ ຫຼື ບໍ່ມີຜູ້ໃດ ຫຼື ສິ່ງໃດທີ່ຈະບໍ່ຖືກຈັດແບ່ງຕາມປະເພດ; ທຸກຄົນຈະຖືກຈັດແບ່ງ ຍ້ອນຈຸດຈົບຂອງທຸກສິ່ງໃກ້ເຂົ້າມາແລ້ວ ແລະ ສະຫວັນ ແລະ ແຜ່ນດິນໂລກທັງປວງໄດ້ໄປເຖິງຈຸດສິ້ນສຸດຂອງມັນແລ້ວ. ມະນຸດຈະສາມາດຫຼີກໜີຍຸກສຸດທ້າຍຂອງການເປັນຢູ່ຂອງມະນຸດໄດ້ແນວໃດ? ແລ້ວດ້ວຍເຫດນັ້ນ ການກະທຳແຫ່ງຄວາມບໍ່ເຊື່ອຟັງຂອງພວກເຈົ້າຈະສືບຕໍ່ອີກດົນສໍ່າໃດ? ເຈົ້າບໍ່ເຫັນບໍວ່າມື້ສຸດທ້າຍຂອງເຈົ້າກຳລັງຈະເກີດຂຶ້ນແລ້ວ? ຄົນທີ່ເຄົາລົບນັບຖືພຣະເຈົ້າ ແລະ ປາຖະໜາໃຫ້ພຣະອົງປາກົດຕົວຈະບໍ່ສາມາດເຫັນມື້ແຫ່ງການປາກົດຕົວຂອງຄວາມຊອບທຳຂອງພຣະເຈົ້າໄດ້ແນວໃດ? ພວກເຂົາຈະບໍ່ສາມາດຮັບເອົາລາງວັນສຸດທ້າຍສຳລັບຄວາມດີໄດ້ແນວໃດ? ເຈົ້າເປັນຄົນທີ່ເຮັດຄວາມດີ ຫຼື ເປັນຄົນທີ່ເຮັດຄວາມຊົ່ວຮ້າຍ? ເຈົ້າເປັນຄົນທີ່ຍອມຮັບການພິພາກສາທີ່ຊອບທຳ ແລະ ແລ້ວເຊື່ອຟັງ ຫຼື ເຈົ້າເປັນຄົນທີ່ຍອມຮັບການພິພາກສາທີ່ຊອບທຳ ແລະ ແລ້ວກໍຖືກສາບແຊ່ງ? ເຈົ້າດຳລົງຊີວິດຢູ່ຕໍ່ໜ້າບັນລັງແຫ່ງການພິພາກສາໃນແສງສະຫວ່າງ ຫຼື ເຈົ້າດຳລົງຊີວິດໃນແດນມໍລະນາໃນທ່າມກາງຄວາມມືດມິດ? ຕົວເຈົ້າເອງບໍ່ແມ່ນຄົນທີ່ຮູ້ຢ່າງຊັດເຈນທີ່ສຸດວ່າຈຸດຈົບຂອງເຈົ້າຈະເປັນຈຸດຈົບແຫ່ງລາງວັນ ຫຼື ຈຸດຈົບແຫ່ງການລົງໂທດບໍ? ເຈົ້າບໍ່ແມ່ນຄົນທີ່ຮູ້ຈັກຢ່າງຊັດເຈນທີ່ສຸດ ແລະ ເຂົ້າໃຈຢ່າງເລິກເຊິ່ງທີ່ສຸດວ່າພຣະເຈົ້າຊອບທຳບໍ? ແລ້ວການປະພຶດ ແລະ ຫົວໃຈຂອງເຈົ້າເປັນແບບໃດ? ໃນຂະນະທີ່ເຮົາເອົາຊະນະເຈົ້າໃນມື້ນີ້, ເຈົ້າຕ້ອງການໃຫ້ເຮົາສະກົດອອກໃຫ້ເຈົ້າເຫັນແທ້ບໍວ່າ ພຶດຕິກຳຂອງເຈົ້າດີ ຫຼື

ຊົ່ວຮ້າຍ? ເຈົ້າໄດ້ເສຍສະຫຼະຫຼາຍສໍ່າໃດເພື່ອເຮົາ? ເຈົ້າໄດ້ນະມັດສະການເຮົາຢ່າງເລິກເຊິ່ງສໍ່າໃດ? ຕົວເຈົ້າເອງບໍ່ຮູ້ຈັກຢ່າງຊັດເຈນແທ້ບໍ່ວ່າເຈົ້າປະພຶດຕໍ່ເຮົາແນວໃດ? ເຈົ້າຄວນຮູ້ດີກວ່າຄົນອື່ນວ່າຈຸດຈົບທີ່ເຈົ້າຈະພົບແມ່ນເປັນແບບໃດ! ເຮົາບອກເຈົ້າຕາມຄວາມຈິງ: ເຮົາພຽງແຕ່ສ້າງມະນຸດຊາດ ແລະ ເຮົາສ້າງເຈົ້າ, ແຕ່ເຮົາບໍ່ໄດ້ມອບພວກເຈົ້າໃຫ້ກັບຊາຕານ; ຫຼື ເຮົາມີເຈດຕະນາເຮັດໃຫ້ພວກເຈົ້າກະບົດ ຫຼື ຕໍ່ຕ້ານເຮົາ ແລະ ໃນທີ່ສຸດຖືກເຮົາລົງໂທດ. ໄພພິບັດ ແລະ ຄວາມທຸກທໍລະມານທັງໝົດເຫຼົ່ານີ້ບໍ່ແມ່ນຍ້ອນຫົວໃຈຂອງພວກເຈົ້າແຂງເກີນໄປ ແລະ ການປະພຶດຂອງພວກເຈົ້າຊົ່ວຊ້າເກີນໄປບໍ? ແລ້ວຈຸດຈົບທີ່ພວກເຈົ້າຈະພົບບໍ່ໄດ້ຖືກກຳນົດໂດຍພວກເຈົ້າເອງບໍ? ເຈົ້າບໍ່ໄດ້ຮູ້ດີກວ່າຄົນອື່ນບໍວ່າ ໃນຫົວໃຈຂອງພວກເຈົ້າ, ພວກເຈົ້າຈະຈົບລົງແນວໃດ? ເຫດຜົນທີ່ເຮົາເອົາຊະນະຜູ້ຄົນແມ່ນເພື່ອເປີດເຜີຍສິ່ງເຫຼົ່ານັ້ນ ແລະ ຍິ່ງດີກວ່ານັ້ນກໍຄືເພື່ອນຳຄວາມລອດພົ້ນມາໃຫ້ກັບເຈົ້າ. ມັນບໍ່ແມ່ນເພື່ອເຮັດໃຫ້ເຈົ້າກະທຳຄວາມຊົ່ວຮ້າຍ ຫຼື ຕັ້ງໃຈເຮັດໃຫ້ເຈົ້າຍ່າງໄປສູ່ນະຮົກແຫ່ງຫາຍະນະ. ເມື່ອເວລາມາເຖິງ, ການທົນທຸກຢ່າງໃຫຍ່ຫຼວງຂອງເຈົ້າທັງໝົດ, ການຮ້ອງໄຫ້ ແລະ ການກັດແຂ້ວຂອງເຈົ້າ, ມັນຈະບໍ່ລ້ວນແລ້ວແຕ່ເປັນຍ້ອນຄວາມບາບຂອງເຈົ້າເອງບໍ? ສະນັ້ນ ຄວາມດີຂອງເຈົ້າ ຫຼື ຄວາມຊົ່ວຂອງເຈົ້າບໍ່ແມ່ນການພິພາກສາທີ່ດີທີ່ສຸດສຳລັບເຈົ້າບໍ? ມັນບໍ່ແມ່ນເຄື່ອງພິສູດສຳຄັນທີ່ສຸດທີ່ພິສູດໃຫ້ເຫັນວ່າຈຸດຈົບຂອງເຈົ້າຈະເປັນແບບໃດບໍ?

ໃນປັດຈຸບັນ, ເຮົາປະຕິບັດພາລະກິດໃນຜູ້ທີ່ຖືກພຣະເຈົ້າເລືອກໃນປະເທດຈີນ ເພື່ອເປີດເຜີຍອຸປະນິໄສກະບົດທັງໝົດຂອງເຂົາ ແລະ ຖອດໜ້າກາກແຫ່ງຄວາມຂີ້ຮ້າຍທັງໝົດຂອງພວກເຂົາ ແລະ ສິ່ງນີ້ໄດ້ໃຫ້ບໍລິບົດເພື່ອເວົ້າທຸກສິ່ງທີ່ເຮົາຈຳເປັນຕ້ອງເວົ້າ. ຫຼັງຈາກນັ້ນ ເມື່ອເຮົາປະຕິບັດຂັ້ນຕອນຕໍ່ໄປຂອງພາລະກິດແຫ່ງການເອົາຊະນະຈັກກະວານທັງປວງ, ເຮົາຈະໃຊ້ການທີ່ເຮົາພິພາກສາພວກເຈົ້າເພື່ອພິພາກສາຄວາມບໍ່ຊອບທຳຂອງທຸກຄົນໃນຈັກກະວານທັງປວງ ຍ້ອນພວກເຈົ້າທຸກຄົນເປັນຕົວແທນແຫ່ງຄວາມກະບົດທ່າມກາງມະນຸດຊາດ. ຄົນທີ່ບໍ່ສາມາດກ້າວຜ່ານໄປໄດ້ແມ່ນຈະກາຍເປັນຄົນຂັດຂວາງ ແລະ ເຄື່ອງມືຮັບໃຊ້ເທົ່ານັ້ນ, ໃນຂະນະທີ່ຄົນທີ່ສາມາດກ້າວຜ່ານໄດ້ຈະຖືກນຳໃຊ້. ເປັນຫຍັງເຮົາຈຶ່ງເວົ້າວ່າຄົນທີ່ບໍ່ສາມາດກ້າວຜ່ານແມ່ນຈະເຮັດໜ້າທີ່ເປັນຜູ້ຂັດຂວາງເທົ່ານັ້ນ? ມັນເປັນເພາະພຣະທຳ ແລະ ພາລະກິດໃນປັດຈຸບັນຂອງເຮົາລ້ວນແລ້ວແຕ່ແນໃສ່ເບື້ອງຫຼັງຂອງພວກເຈົ້າ ແລະ ຍ້ອນພວກເຈົ້າໄດ້ກາຍມາເປັນຕົວແທນ ແລະ ຕົວຢ່າງແຫ່ງຄວາມກະບົດທ່າມກາງມະນຸດຊາດທັງປວງ. ຕໍ່ມາ, ເຮົາຈະນຳພຣະທຳເຫຼົ່ານີ້ທີ່ເອົາຊະນະພວກເຈົ້າໄປຕ່າງປະເທດ ແລະ ໃຊ້ພຣະທຳເຫຼົ່ານັ້ນເພື່ອເອົາຊະນະຜູ້ຄົນໃນທີ່ນັ້ນ, ແຕ່ເຈົ້າຈະບໍ່ໄດ້ຮັບພຣະທຳເຫຼົ່ານັ້ນ. ສິ່ງນັ້ນຈະບໍ່ເຮັດໃຫ້ເຈົ້າກາຍເປັນຜູ້ຂັດຂວາງບໍ? ອຸປະນິໄສທີ່ເສື່ອມຊາມຂອງມະນຸດຊາດທັງປວງ, ການກະທຳທີ່ກະບົດຂອງມະນຸດ ແລະ ພາບ ແລະ ໃບໜ້າທີ່ຂີ້ຮ້າຍຂອງມະນຸດ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ຖືກບັນທຶກໃນພຣະທຳໃນປັດຈຸບັນທີ່ໃຊ້ເພື່ອເອົາຊະນະພວກເຈົ້າ. ແລ້ວເຮົາຈະໃຊ້ພຣະທຳເຫຼົ່ານີ້ເພື່ອເອົາຊະນະຜູ້ຄົນໃນທຸກຊົນຊາດ ແລະ ທຸກນິກາຍ, ເພາະພວກເຈົ້າຄືຕົ້ນແບບ ແລະ ເປັນຕົວຢ່າງຜ່ານມາ. ເຖິງຢ່າງໃດກໍຕາມ, ເຮົາບໍ່ໄດ້ກ່າວໂດຍມີເຈດຕະນາທີ່ຈະປະຖິ້ມພວກເຈົ້າ; ຖ້າພວກເຈົ້າບໍ່ສາມາດປະຕິບັດຢ່າງດີໃນການ

ສະແຫວງຫາຂອງພວກເຈົ້າ ແລະ ດ້ວຍເຫດນັ້ນ ພວກເຈົ້າກໍໄດ້ພິສູດວ່າຕົນເອງປົວບໍ່ໄດ້, ພວກເຈົ້າຈະບໍ່ເປັນພຽງເຄື່ອງມືຮັບໃຊ້ ແລະ ຄົນຂັດຂວາງເທົ່ານັ້ນບໍ? ເຮົາເຄີຍເວົ້າວ່າສະຕິປັນຍາຂອງເຮົາແມ່ນຖືກນຳໃຊ້ໂດຍອີງຕາມກົນອຸບາຍຂອງຊາຕານ. ເປັນຫຍັງເຮົາຈຶ່ງເວົ້າແບບນັ້ນ? ນັ້ນບໍ່ແມ່ນຄວາມຈິງທີ່ຢູ່ເບື້ອງຫຼັງສິ່ງທີ່ເຮົາກຳລັງເວົ້າ ແລະ ເຮັດໃນຕອນນີ້ບໍ? ຖ້າເຈົ້າບໍ່ສາມາດກ້າວຜ່ານໄປໄດ້, ຖ້າເຈົ້າບໍ່ຖືກເຮັດໃຫ້ສົມບູນ ແຕ່ກົງກັນຂ້າມຖືກລົງໂທດ, ເຈົ້າຈະບໍ່ກາຍເປັນຄົນຂັດຂວາງບໍ? ບາງເທື່ອເຈົ້າໄດ້ທົນທຸກຢ່າງຫຼວງຫຼາຍໃນຊີວິດຂອງເຈົ້າ, ແຕ່ເຈົ້າກໍຍັງບໍ່ເຂົ້າໃຈຫຍັງເລີຍ; ເຈົ້າບໍ່ຮູ້ຈັກຫຍັງກ່ຽວກັບຊີວິດ. ເຖິງແມ່ນເຈົ້າຈະຖືກຂ້ຽນຕີ ແລະ ຖືກພິພາກສາ, ເຈົ້າກໍບໍ່ໄດ້ປ່ຽນແປງຫຍັງເລີຍ ແລະ ໃນສ່ວນເລິກຂອງເຈົ້າ ເຈົ້າບໍ່ໄດ້ຮັບຊີວິດ. ເມື່ອເວລາທີ່ຈະທົດສອບວຽກງານຂອງເຈົ້າມາເຖິງ, ເຈົ້າຈະຜະເຊີນກັບການທົດລອງທີ່ດຸເດືອດຄືກັບແປວໄຟ ແລະ ຍິ່ງໄປກວ່ານັ້ນ ຈະຜະເຊີນກັບຄວາມລຳບາກຍາກແຄ້ນຫຼາຍທີ່ສຸດ. ແປວໄຟນີ້ຈະເຮັດໃຫ້ຕົວຕົນທັງໝົດຂອງເຈົ້າກາຍເປັນຂີ້ເທົ່າ. ໃນຖານະຂອງຄົນທີ່ບໍ່ມີຊີວິດ, ຄົນທີ່ບໍ່ມີຄຳບໍລິສຸດໜຶ່ງອອນຢູ່ພາຍໃນ, ຄົນທີ່ຍັງຕິດຢູ່ກັບອຸປະນິໄສເດີມທີ່ເສື່ອມຊາມ ແລະ ຄົນທີ່ບໍ່ສາມາດແມ່ນແຕ່ຈະເຮັດໜ້າທີ່ໃນການເປັນຄົນຮັບໃຊ້ທີ່ດີ, ເຈົ້າຈະບໍ່ຖືກກຳຈັດໄດ້ແນວໃດ? ຄົນທີ່ມີຄ່າໜ້ອຍກວ່າໜຶ່ງກີບ ແລະ ຄົນທີ່ບໍ່ມີຊີວິດຈະເປັນປະໂຫຍດຫຍັງສຳລັບພາລະກິດແຫ່ງການເອົາຊະນະ? ເມື່ອເວລານັ້ນມາເຖິງ, ມື້ຂອງພວກເຈົ້າຈະຍິ່ງຮ້າຍແຮງຫຼາຍກວ່າມື້ຂອງໂນອາ ແລະ ໂຊໂດມ! ແລ້ວຄຳອະທິຖານຂອງເຈົ້າຈະບໍ່ມີປະໂຫຍດຫຍັງກັບເຈົ້າ. ເຈົ້າຈະສາມາດກັບຄືນມາ ແລະ ເລີ່ມກັບໃຈໃໝ່ໄດ້ແນວໃດ ເມື່ອພາລະກິດແຫ່ງຄວາມລອດພົ້ນໄດ້ສິ້ນສຸດລົງແລ້ວ? ຫຼັງຈາກທີ່ພາລະກິດທັງໝົດແຫ່ງຄວາມລອດພົ້ນຖືກເຮັດໃຫ້ສຳເລັດ, ມັນກໍຈະບໍ່ມີອີກຕໍ່ໄປ; ສິ່ງທີ່ຈະມີຢູ່ກໍຄືການເລີ່ມຕົ້ນຂອງພາລະກິດແຫ່ງການລົງໂທດຄົນທີ່ຊົ່ວຮ້າຍ. ເຈົ້າຕໍ່ຕ້ານ, ເຈົ້າກະບົດ ແລະ ເຈົ້າເຮັດສິ່ງຕ່າງໆທີ່ເຈົ້າຮູ້ວ່າເປັນສິ່ງຊົ່ວຮ້າຍ. ເຈົ້າບໍ່ແມ່ນເປົ້າໝາຍຂອງການລົງໂທດທີ່ຮ້າຍແຮງບໍ? ເຮົາກຳລັງສະກົດສິ່ງນີ້ອອກໃຫ້ເຈົ້າເຫັນໃນປັດຈຸບັນ. ຖ້າເຈົ້າເລືອກທີ່ຈະບໍ່ຟັງ, ແລ້ວເມື່ອໄພພິບັດເກີດຂຶ້ນກັບເຈົ້າໃນເວລາຕໍ່ມາ, ມັນຈະບໍ່ຊ້າເກີນໄປບໍ ຖ້າເຈົ້າພຽງແຕ່ເລີ່ມຮູ້ສຶກເສຍໃຈ ແລະ ເລີ່ມເຊື່ອໃນຕອນນັ້ນ? ເຮົາກຳລັງໃຫ້ໂອກາດເຈົ້າກັບໃຈໃນມື້ນີ້, ແຕ່ເຈົ້າກໍບໍ່ເຕັມໃຈທີ່ຈະເຮັດແບບນັ້ນ. ເຈົ້າຕ້ອງການລໍຖ້າອີກດົນປານໃດ? ຈົນເຖິງມື້ແຫ່ງການຂ້ຽນຕີບໍ? ໃນປັດຈຸບັນ ເຮົາບໍ່ຈື່ການຝ່າຝືນໃນອະດີດຂອງເຈົ້າ; ເຮົາໃຫ້ອະໄພເຈົ້າຄັ້ງແລ້ວຄັ້ງເລົ່າ, ພະຍາຍາມບໍ່ເບິ່ງດ້ານລົບຂອງເຈົ້າ ແຕ່ເບິ່ງພຽງດ້ານບວກຂອງເຈົ້າ, ເພາະວ່າ ພຣະທຳ ແລະ ພາລະກິດທັງໝົດຂອງເຮົາທີ່ຢູ່ໃນປັດຈຸບັນແມ່ນຕັ້ງໃຈຊ່ວຍໃຫ້ເຈົ້າລອດພົ້ນ ແລະ ເຮົາບໍ່ໄດ້ມີເຈດຕະນາທີ່ບໍ່ດີຕໍ່ເຈົ້າ. ແຕ່ເຈົ້າກໍປະຕິເສດທີ່ຈະເຂົ້າສູ່; ເຈົ້າບໍ່ສາມາດແຍກແຍະສິ່ງທີ່ດີອອກຈາກສິ່ງທີ່ຊົ່ວ ແລະ ບໍ່ຮູ້ຈັກເຫັນຄຸນຄ່າຄວາມເມດຕາ. ຄົນປະເພດດັ່ງກ່າວບໍ່ແມ່ນພຽງແຕ່ລໍຖ້າການມາເຖິງຂອງການລົງໂທດ ແລະ ຜົນກຳສະໜອງອັນຊອບທຳບໍ?

ເມື່ອໂມເຊຕີກ້ອນຫີນ ແລ້ວນໍ້າທີ່ປະທານໂດຍພຣະເຢໂຮວາກໍໄຫຼພຸ່ງອອກມາ ນັ້ນກໍຍ້ອນມາຈາກຄວາມສັດທາຂອງໂມເຊ. ເມື່ອເດວິດຫຼິ້ນພິນສັນລະເສີນເຮົາ ກໍຄືພຣະເຢໂຮວາ ດ້ວຍຫົວໃຈທີ່ເຕັມໄປດ້ວຍຄວາມສຸກ ກໍຍ້ອນຄວາມສັດທາຂອງເດວິດ. ໂຢບສູນເສຍສັດລ້ຽງທີ່ເຕັມພູເຂົາ ແລະ

ຄວາມຮັ່ງມີຢ່າງມະຫາສານ ແລະ ຕົນຕົວກໍເຕັມໄປດ້ວຍຕຸ່ມໜອງ ກໍຍ້ອນຄວາມສັດທາຂອງລາວ. ເມື່ອລາວສາມາດໄດ້ຍິນສຽງຂອງເຮົາ ກໍຄືພຣະເຢໂຮວາ ແລະ ເຫັນຄວາມສະຫງ່າລາສີຂອງເຮົາ ກໍຄືພຣະເຢໂຮວາ ນັ້ນກໍຍ້ອນຄວາມສັດທາຂອງລາວ. ເປໂຕສາມາດຕິດຕາມພຣະເຢຊູຄຣິດ ກໍຍ້ອນຄວາມສັດທາຂອງເປໂຕ. ລາວຖືກຕອກຕະປູຄຶງໃສ່ໄມ້ກາງແຂນເພື່ອເຮົາ ແລະ ເພື່ອມອບປະຈັກພະຍານອັນຍິ່ງໃຫຍ່ໃຫ້ແດ່ເຮົາ ກໍຍ້ອນຄວາມສັດທາຂອງລາວເຊັ່ນກັນ. ໂຢຮັນໄດ້ເຫັນຮູບຮ່າງອັນສະຫງ່າລາສີຂອງພຣະບຸດມະນຸດ ກໍຍ້ອນຄວາມສັດທາຂອງໂຢຮັນ. ລາວໄດ້ເຫັນນິມິດແຫ່ງຍຸກສຸດທ້າຍ ກໍຍ້ອນຄວາມສັດທາຂອງລາວເຊັ່ນກັນ. ສາເຫດກຸ່ມທີ່ຖືກເອີ້ນວ່າ ຕ່າງຊາດທັງຫຼາຍໄດ້ຮັບການເປີດເຜີຍຈາກເຮົາ ແລະ ມາຮູ້ຈັກວ່າເຮົາ ໄດ້ກັບຄືນມາໃນຮ່າງກາຍມະນຸດເພື່ອກະທຳພາລະກິດໃນທ່າມກາງມະນຸດ ກໍຍ້ອນຄວາມສັດທາຂອງພວກເຂົາເຊັ່ນກັນ. ທຸກຄົນທີ່ຖືກຂ້ຽນຕີໂດຍພຣະທຳທີ່ຮຸນແຮງຂອງເຮົາ ແລະ ຍັງຖືກປອບໃຈໂດຍພຣະທຳເຫຼົ່ານັ້ນ ແລະ ຖືກຊ່ວຍໃຫ້ລອດພົ້ນ, ພວກເຂົາບໍ່ໄດ້ຖືກປະຕິບັດແບບນັ້ນຍ້ອນຄວາມເຊື່ອຂອງພວກເຂົາບໍ? ຜູ້ຄົນໄດ້ຮັບຢ່າງຫຼວງຫຼາຍຍ້ອນຄວາມເຊື່ອຂອງພວກເຂົາ ແລະ ມັນກໍບໍ່ແມ່ນພອນຢູ່ສະເໝີໄປ. ພວກເຂົາອາດບໍ່ໄດ້ຮັບຄວາມສຸກ ແລະ ຄວາມປິຕິຍິນດີແບບດຽວກັນກັບທີ່ເດວິດຮູ້ສຶກ ຫຼື ມີນໍ້າທີ່ປະທານໂດຍພຣະເຢໂຮວາດັ່ງທີ່ໂມເຊມີ. ຕົວຢ່າງເຊັ່ນ ໂຢບໄດ້ຮັບພອນຈາກພຣະເຢໂຮວາຍ້ອນຄວາມເຊື່ອຂອງເພິ່ນ, ແຕ່ເພິ່ນກໍຍັງທົນທຸກກັບໄພພິບັດເຊັ່ນກັນ. ບໍ່ວ່າເຈົ້າຈະຖືກອວຍພອນ ຫຼື ທົນທຸກກັບໄພພິບັດ, ທັງສອງແມ່ນເຫດການແຫ່ງພອນ. ຫາກປາສະຈາກຄວາມເຊື່ອ, ເຈົ້າຈະບໍ່ສາມາດຮັບເອົາພາລະກິດແຫ່ງການເອົາຊະນະນີ້ໄດ້, ແຮງໄກທີ່ຈະໄດ້ເຫັນເຖິງການກະທຳຂອງພຣະເຢໂຮວາທີ່ສະແດງອອກຕໍ່ໜ້າຂອງເຈົ້າໃນປັດຈຸບັນ. ເຈົ້າຈະບໍ່ສາມາດເຫັນໄດ້, ແຮງໄກທີ່ເຈົ້າຈະສາມາດຮັບເອົາ. ພິໄພບັດເຫຼົ່ານີ້, ໄພໃຫຍ່ຫຼວງເຫຼົ່ານີ້ ແລະ ການພິພາກສາທັງໝົດ, ຖ້າພວກມັນບໍ່ໄດ້ເກີດຂຶ້ນກັບເຈົ້າ, ເຈົ້າຈະສາມາດເຫັນການກະທຳຂອງພຣະເຢໂຮວາໃນປັດຈຸບັນບໍ? ໃນປັດຈຸບັນ, ມັນແມ່ນຄວາມເຊື່ອທີ່ເຮັດໃຫ້ເຈົ້າຖືກເອົາຊະນະ ແລະ ມັນຄືການຖືກເອົາຊະນະທີ່ເຮັດໃຫ້ເຈົ້າເຊື່ອໃນການກະທຳທຸກຢ່າງຂອງພຣະເຢໂຮວາ. ຍ້ອນຄວາມເຊື່ອເທົ່ານັ້ນ ເຈົ້າຈຶ່ງໄດ້ຮັບການຂ້ຽນຕີ ແລະ ການພິພາກສາດັ່ງກ່າວ. ຜ່ານການຂ້ຽນຕີ ແລະ ການພິພາກສານີ້, ເຈົ້າຈຶ່ງຖືກເອົາຊະນະ ແລະ ຖືກເຮັດໃຫ້ສົມບູນ. ຫາກປາສະຈາກການຂ້ຽນຕີ ແລະ ການພິພາກສາແບບທີ່ເຈົ້າກຳລັງໄດ້ຮັບໃນປັດຈຸບັນນີ້, ຄວາມເຊື່ອຂອງເຈົ້າກໍຈະສູນເປົ່າ, ເພາະເຈົ້າຈະບໍ່ຮູ້ຈັກພຣະເຈົ້າ; ບໍ່ວ່າເຈົ້າຈະເຊື່ອໃນພຣະອົງຫຼາຍສໍ່າໃດກໍຕາມ, ຄວາມເຊື່ອຂອງເຈົ້າຈະຍັງເປັນພຽງການສະແດງອອກທີ່ວ່າງເປົ່າເຊິ່ງບໍ່ໄດ້ມີພື້ນຖານໃນຄວາມເປັນຈິງ. ພຽງແຕ່ຫຼັງຈາກທີ່ເຈົ້າໄດ້ຮັບພາລະກິດແຫ່ງການເອົາຊະນະນີ້, ພາລະກິດທີ່ເຮັດໃຫ້ເຈົ້າເຊື່ອຟັງຢ່າງສົມບູນ, ຄວາມເຊື່ອຂອງເຈົ້າຈຶ່ງຈະກາຍເປັນຈິງ ແລະ ເພິ່ງພາໄດ້ ແລະ ຫົວໃຈຂອງເຈົ້າກໍຈະຫັນໄປຫາພຣະເຈົ້າ. ເຖິງແມ່ນເຈົ້າທົນທຸກກັບການພິພາກສາ ແລະ ການສາບແຊ່ງຢ່າງຫຼວງຫຼາຍຍ້ອນຄໍາວ່າ "ຄວາມເຊື່ອ", ເຖິງຢ່າງນັ້ນກໍຕາມເຈົ້າກໍມີຄວາມເຊື່ອທີ່ແທ້ຈິງ ແລະ ເຈົ້າໄດ້ຮັບເອົາສິ່ງທີ່ແທ້ຈິງທີ່ສຸດ, ເປັນຈິງທີ່ສຸດ ແລະ ລໍ້າຄ່າທີ່ສຸດ. ນີ້ແມ່ນຍ້ອນລະຫວ່າງການພິພາກສາເທົ່ານັ້ນທີ່ເຈົ້າເຫັນເຖິງຈຸດໝາຍປາຍທາງສຸດທ້າຍຂອງການເນ

ລະນິດສ້າງຂອງພຣະເຈົ້າ; ຢູ່ໃນການພິພາກສານີ້, ເຈົ້າຈຶ່ງໄດ້ເຫັນວ່າ ພຣະຜູ້ສ້າງແມ່ນເປັນທີ່ຮັກ; ຢູ່ໃນພາລະກິດແຫ່ງການເອົາຊະນະດັ່ງກ່າວ ເຈົ້າຈຶ່ງໄດ້ເຫັນເຖິງແຂນຂອງພຣະເຈົ້າ; ຢູ່ໃນການເອົາຊະນະນີ້ ເຈົ້າຈຶ່ງເລີ່ມເຂົ້າໃຈຢ່າງສົມບູນເຖິງຊີວິດຂອງມະນຸດ; ຢູ່ໃນການເອົາຊະນະນີ້ ເຈົ້າຈຶ່ງຮັບເອົາເສັ້ນທາງທີ່ຖືກຕ້ອງຂອງຊີວິດມະນຸດ ແລະ ເລີ່ມເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງ "ມະນຸດ"; ຢູ່ໃນການເອົາຊະນະນີ້ເທົ່ານັ້ນ ເຈົ້າຈຶ່ງເຫັນເຖິງອຸປະນິໄສອັນຊອບທຳຂອງອົງຊົງລິດທານຸພາບສູງສຸດ ແລະ ໃບໜ້າທີ່ສວຍງາມ ແລະ ສະຫງ່າງາມຂອງພຣະອົງ; ຢູ່ໃນພາລະກິດແຫ່ງການເອົາຊະນະນີ້ ເຈົ້າຈຶ່ງຮຽນຮູ້ເຖິງຈຸດກຳເນີດຂອງມະນຸດ ແລະ ເຂົ້າໃຈເຖິງ "ປະຫວັດສາດທີ່ອຳມະຕະ" ຂອງມະນຸດຊາດ; ຢູ່ໃນການເອົາຊະນະນີ້ ເຈົ້າຈຶ່ງເລີ່ມເຂົ້າໃຈເຖິງບັນພະບຸລຸດຂອງມະນຸດຊາດ ແລະ ຈຸດກຳເນີດຂອງຄວາມເສື່ອມຊາມຂອງມະນຸດຊາດ; ຢູ່ໃນການເອົາຊະນະນີ້ ເຈົ້າຈຶ່ງໄດ້ຮັບເອົາຄວາມປິຕິຍິນດີ ແລະ ຄວາມສຸກສະບາຍ ພ້ອມກັບການຕີສອນທີ່ບໍ່ສິ້ນສຸດ, ການລົງວິໄນ ແລະ ພຣະທຳແຫ່ງການຕຳນິຕິເຕືອນຈາກພຣະຜູ້ສ້າງຕໍ່ມະນຸດຊາດທີ່ພຣະອົງສ້າງຂຶ້ນ; ຢູ່ໃນພາລະກິດແຫ່ງການເອົາຊະນະນີ້ ເຈົ້າຈຶ່ງໄດ້ຮັບພອນ ພ້ອມກັບໄພພິບັດທີ່ມະນຸດຄວນຈະໄດ້ຮັບ... ນີ້ບໍ່ແມ່ນຍ້ອນຄວາມເຊື່ອທີ່ເລັກນ້ອຍຂອງເຈົ້າບໍ? ແລ້ວຄວາມເຊື່ອຂອງເຈົ້າຈະບໍ່ໄດ້ເຕີບໃຫຍ່ຫຼັງຈາກທີ່ເຈົ້າໄດ້ຮັບເອົາສິ່ງເຫຼົ່ານີ້ບໍ? ເຈົ້າບໍ່ໄດ້ຮັບເອົາຢ່າງຫຼວງຫຼາຍບໍ? ບໍ່ແມ່ນແຕ່ເຈົ້າໄດ້ຍິນພຣະທຳຂອງພຣະເຈົ້າ ແລະ ໄດ້ເຫັນເຖິງສະຕິປັນຍາຂອງພຣະເຈົ້າ, ແຕ່ເຈົ້າຍັງຜະເຊີນກັບແຕ່ລະຂັ້ນຕອນຂອງພາລະກິດຂອງພຣະອົງເປັນການສ່ວນຕົວ. ບາງເທື່ອເຈົ້າຈະເວົ້າວ່າ ຖ້າເຈົ້າບໍ່ມີຄວາມເຊື່ອ, ແລ້ວເຈົ້າກໍຈະບໍ່ທົນທຸກກັບການຂ້ຽນຕີແບບນີ້ ຫຼື ກັບການພິພາກສາແບບນີ້. ແຕ່ເຈົ້າຄວນຮູ້ວ່າ ຫາກປາສະຈາກຄວາມເຊື່ອ, ບໍ່ແມ່ນພຽງເຈົ້າຈະບໍ່ສາມາດຮັບເອົາການຂ້ຽນຕີແບບນີ້ ຫຼື ການດູແລແບບນີ້ຈາກອົງຊົງລິດທານຸພາບສູງສຸດ, ແຕ່ເຈົ້າຍັງຈະສູນເສຍໂອກາດທີ່ຈະພົບກັບພຣະຜູ້ສ້າງຕະຫຼອດໄປ. ເຈົ້າຈະບໍ່ຮູ້ຈັກຕົ້ນກຳເນີດຂອງມະນຸດຊາດຈັກເທື່ອ ແລະ ບໍ່ເຂົ້າໃຈເຖິງຄວາມໝາຍຂອງຊີວິດມະນຸດຈັກເທື່ອ. ເຖິງແມ່ນຮ່າງກາຍຂອງເຈົ້າຕາຍໄປ ແລະ ວິນຍານຂອງເຈົ້າຈາກໄປ, ເຈົ້າກໍຍັງຈະບໍ່ເຂົ້າໃຈການກະທຳທັງໝົດຂອງພຣະຜູ້ສ້າງ, ແຮງໄກທີ່ເຈົ້າຈະຮູ້ຈັກວ່າພຣະຜູ້ສ້າງປະຕິບັດພາລະກິດທີ່ຍິ່ງໃຫຍ່ດັ່ງກ່າວເທິງແຜ່ນດິນໂລກ ຫຼັງຈາກທີ່ພຣະອົງສ້າງມະນຸດຊາດ. ໃນຖານະສະມາຊິກຂອງມະນຸດຊາດທີ່ພຣະອົງສ້າງຂຶ້ນມາ, ເຈົ້າເຕັມໃຈທີ່ຈະຕົກລົງສູ່ຄວາມມືດມົດໂດຍບໍ່ຮູ້ຈັກຫຍັງແບບນີ້ ແລະ ທົນທຸກກັບການລົງໂທດຊົ່ວນິດນິລັນບໍ? ຖ້າເຈົ້າແຍກຕົນເອງອອກຈາກການຂ້ຽນຕີ ແລະ ການພິພາກສາໃນປັດຈຸບັນ, ແມ່ນຫຍັງຄືສິ່ງທີ່ເຈົ້າຈະໄດ້ພົບ? ເຈົ້າຄິດວ່າຫຼັງຈາກທີ່ອອກຈາກການພິພາກສາໃນປັດຈຸບັນ, ເຈົ້າຈະສາມາດຫຼົບໜີຈາກຊີວິດທີ່ຫຍຸ້ງຍາກນີ້ໄດ້ບໍ? ມັນບໍ່ແມ່ນຄວາມຈິງບໍວ່າ ຖ້າເຈົ້າອອກຈາກ "ບ່ອນນີ້" ໄປ, ສິ່ງທີ່ເຈົ້າຈະຜະເຊີນຄືຄວາມທໍລະມານຢ່າງເຈັບປວດ ຫຼື ການຂົ່ມເຫັງຢ່າງໂຫດຮ້າຍທີ່ເກີດຈາກຜີຮ້າຍ? ເຈົ້າອາດຜະເຊີນກັບກາງເວັນ ແລະ ກາງຄືນທີ່ບໍ່ສາມາດທົນໄດ້? ເຈົ້າຄິດວ່າ ພຽງແຕ່ຍ້ອນເຈົ້າຫຼົບໜີການພິພາກສານີ້ໃນມື້ນີ້, ເຈົ້າກໍສາມາດຫຼົບຫຼີກການທໍລະມານໃນອະນາຄົດໄດ້ບໍ? ແມ່ນຫຍັງຈະເກີດຂຶ້ນກັບເຈົ້າ? ມັນສາມາດເປັນ ແຊງກຣີລາ ແທ້ໆບໍທີ່ເຈົ້າຫວັງວ່າຈະໄດ້ຮັບ? ເຈົ້າຄິດວ່າເຈົ້າສາມາດຫຼົບໜີການຂ້ຽນຕີຊົ່ວນິດ

ນິລັນໃນອະນາຄົດໂດຍພຽງແຕ່ແລ່ນໜີຈາກຄວາມເປັນຈິງແບບທີ່ເຈົ້າເຮັດໃນຕອນນີ້ບໍ? ຫຼັງຈາກມື້ນີ້, ເຈົ້າຈະສາມາດຄົ້ນພົບໂອກາດແບບນີ້ ແລະ ພອນແບບນີ້ອີກບໍ? ເຈົ້າຈະສາມາດຄົ້ນພົບສິ່ງເຫຼົ່ານັ້ນ ເມື່ອໄພພິບັດເກີດຂຶ້ນກັບເຈົ້າບໍ? ເຈົ້າຈະສາມາດຊອກຫາສິ່ງເຫຼົ່ານັ້ນ ເມື່ອມະນຸດຊາດທັງປວງເຂົ້າສູ່ຄວາມສະຫງົບບໍ? ຊີວິດທີ່ມີຄວາມສຸກຂອງເຈົ້າໃນປັດຈຸບັນ ແລະ ຄອບຄົວນ້ອຍໆທີ່ປອງດອງກັນຂອງເຈົ້າ, ພວກເຂົາສາມາດແທນຈຸດໝາຍປາຍທາງຊົ່ວນິດນິລັນໃນອະນາຄົດຂອງເຈົ້າບໍ? ຖ້າເຈົ້າມີຄວາມເຊື່ອທີ່ແທ້ຈິງ ແລະ ຖ້າເຈົ້າໄດ້ຮັບຢ່າງຫຼວງຫຼາຍ ຍ້ອນຄວາມເຊື່ອຂອງເຈົ້າ, ແລ້ວທຸກສິ່ງນັ້ນກໍເປັນສິ່ງທີ່ເຈົ້າ ເຊິ່ງເປັນສິ່ງຖືກສ້າງ ຄວນຈະໄດ້ຮັບ ແລະ ຍັງເປັນສິ່ງທີ່ເຈົ້າຄວນມີຕັ້ງແຕ່ຕອນທຳອິດແລ້ວ. ບໍ່ມີຫຍັງທີ່ເປັນປະໂຫຍດຕໍ່ຄວາມເຊື່ອ ແລະ ຊີວິດຂອງເຈົ້າໄດ້ຫຼາຍກວ່າການເອົາຊະນະດັ່ງກ່າວ.

ໃນປັດຈຸບັນ, ເຈົ້າຈຳເປັນຕ້ອງເຂົ້າໃຈວ່າພຣະເຈົ້າຮຽກຮ້ອງຫຍັງຈາກຄົນທີ່ຖືກເອົາຊະນະ, ແມ່ນຫຍັງຄືທັດສະນະຄະຕິຂອງພຣະອົງຕໍ່ຄົນທີ່ຖືກເຮັດໃຫ້ສົມບູນ ແລະ ເຈົ້າຄວນເຂົ້າສູ່ຫຍັງໃນປັດຈຸບັນ. ບາງສິ່ງ ເຈົ້າຈຳເປັນຕ້ອງເຂົ້າໃຈພຽງແຕ່ໜ້ອຍດຽວ. ເຈົ້າບໍ່ຈຳເປັນຕ້ອງວິເຄາະຄຳເວົ້າບາງຢ່າງທີ່ເລິກລັບຢ່າງລະອຽດ; ພວກມັນຈະບໍ່ໄດ້ຊ່ວຍຫຍັງຫຼາຍໃນຊີວິດ ແລະ ພວກມັນພຽງແຕ່ຈຳເປັນຕ້ອງເບິ່ງໄວໆ. ເຈົ້າສາມາດອ່ານຄວາມເລິກລັບ ເຊັ່ນ ຄວາມເລິກລັບຂອງອາດາມ ແລະ ເອວາ: ສິ່ງທີ່ອາດາມ ແລະ ເອວາເປັນໃນຕອນນີ້ ແລະ ພາລະກິດທີ່ພຣະເຈົ້າຕ້ອງການປະຕິບັດໃນປັດຈຸບັນ. ເຈົ້າຈຳເປັນຕ້ອງເຂົ້າໃຈວ່າ ໃນການເອົາຊະນະ ແລະ ການເຮັດໃຫ້ມະນຸດສົມບູນ, ພຣະເຈົ້າປາຖະໜາທີ່ຈະເຮັດໃຫ້ມະນຸດກັບຄືນສູ່ລັກສະນະທີ່ອາດາມ ແລະ ເອວາເປັນ. ໃນຫົວໃຈຂອງເຈົ້າ, ເຈົ້າຄວນມີແນວຄິດດີໆກ່ຽວກັບລະດັບຂອງຄວາມສົມບູນທີ່ຕ້ອງຖືກເຮັດໃຫ້ສຳເລັດເພື່ອບັນລຸມາດຕະຖານຂອງພຣະເຈົ້າ ແລະ ແລ້ວເຈົ້າກໍຕ້ອງພະຍາຍາມເພື່ອບັນລຸມັນໃຫ້ໄດ້. ສິ່ງນີ້ແມ່ນກ່ຽວພັນກັບການປະຕິບັດຂອງເຈົ້າ ແລະ ນີ້ແມ່ນສິ່ງທີ່ເຈົ້າຄວນເຂົ້າໃຈ. ມັນພຽງພໍທີ່ຈະໃຫ້ເຈົ້າສະແຫວງຫາເພື່ອເຂົ້າສູ່ພຣະທຳຂອງພຣະເຈົ້າກ່ຽວກັບເລື່ອງເຫຼົ່ານີ້. ເມື່ອເຈົ້າອ່ານວ່າ "ປະຫວັດສາດໄດ້ໃຊ້ຫຼາຍສິບຫຼາຍພັນກວ່າປີເພື່ອທີ່ມະນຸດຊາດຈະມາຮອດຈຸດທີ່ຕົນຢູ່ໃນປັດຈຸບັນ", ເຈົ້າກໍຢາກຮູ້ຢາກເຫັນ ແລະ ດ້ວຍເຫດນັ້ນ ເຈົ້າຈຶ່ງພະຍາຍາມຄົ້ນຫາຄຳຕອບກັບອ້າຍເອື້ອຍນ້ອງຂອງເຈົ້າ. "ພຣະເຈົ້າເວົ້າວ່າການພັດທະນາຂອງມະນຸດຊາດຍ້ອນກັບໄປຫົກພັນປີ, ແມ່ນບໍ? ແລ້ວສິ່ງນີ້ກ່ຽວຫຍັງກັບຫຼາຍສິບພັນປີ?" ມັນຈະມີປະໂຫຍດຫຍັງທີ່ຈະພະຍາຍາມຊອກຫາຄຳຕອບຕໍ່ຄຳຖາມນີ້? ບໍ່ວ່າພຣະເຈົ້າເອງປະຕິບັດພາລະກິດເປັນເວລາຫຼາຍສິບພັນປີ ຫຼື ຫຼາຍຮ້ອຍຫຼາຍລ້ານປີ, ພຣະອົງຈຳເປັນຕ້ອງໃຫ້ເຈົ້າຮູ້ກ່ຽວກັບສິ່ງນີ້ບໍ? ນີ້ບໍ່ແມ່ນສິ່ງທີ່ເຈົ້າໃນຖານະຜູ້ຖືກສ້າງ ຈຳເປັນຕ້ອງຮູ້. ພຽງແຕ່ເຈົ້າຍອມພິຈາລະນາເລັກນ້ອຍກັບການສົນທະນານີ້ ແລະບໍ່ພະຍາຍາມເຂົ້າໃຈມັນຄືກັບວ່າມັນເປັນນິມິດ. ເຈົ້າຈຳເປັນຕ້ອງຮູ້ເຖິງສິ່ງທີ່ເຈົ້າຄວນເຂົ້າສູ່ ແລະເຂົ້າໃຈໃນປັດຈຸບັນ ແລະ ເຈົ້າຈຳເປັນຕ້ອງມີຄວາມເຂົ້າໃຈທີ່ໝັ້ນຄົງກ່ຽວກັບສິ່ງນັ້ນ. ມີແຕ່ເມື່ອນັ້ນເຈົ້າຈຶ່ງຈະຖືກເອົາຊະນະ. ຫຼັງຈາກທີ່ໄດ້ອ່ານຂໍ້ຄວາມຂ້າງເທິງ, ເຈົ້າຄວນມີປະຕິກິລິຍາປົກກະຕິໃນຕົວເຈົ້າ: ພຣະເຈົ້າກຳລັງເຜົາໄໝ້ດ້ວຍຄວາມກັງວົນໃຈ, ພຣະອົງຕ້ອງການເອົາຊະນະພວກເຮົາ ແລະ ຮັບເອົາ

ສະຫງ່າລາສີ ແລະ ຄຳພະຍານ, ແລ້ວພວກເຮົາຈະຮ່ວມມືກັບພຣະອົງໄດ້ແນວໃດ? ພວກເຮົາຕ້ອງເຮັດຫຍັງເພື່ອທີ່ຈະຖືກພຣະອົງເອົາຊະນະຢ່າງສົມບູນ ແລະ ກາຍເປັນຄຳພະຍານຂອງພຣະອົງ? ພວກເຮົາຕ້ອງເຮັດຫຍັງເພື່ອເຮັດໃຫ້ພຣະເຈົ້າສາມາດຮັບເອົາສະຫງ່າລາສີໄດ້? ພວກເຮົາຕ້ອງເຮັດຫຍັງເພື່ອເຮັດໃຫ້ພວກເຮົາເອງດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ ແລະ ບໍ່ຢູ່ພາຍໃຕ້ອຳນາດຂອງຊາຕານ? ນີ້ແມ່ນສິ່ງທີ່ຜູ້ຄົນຄວນຄິດ. ພວກເຈົ້າທຸກຄົນຄວນຊັດເຈນກ່ຽວກັບຄວາມໝາຍຂອງການເອົາຊະນະຂອງພຣະເຈົ້າ. ນີ້ແມ່ນຄວາມຮັບຜິດຊອບຂອງພວກເຈົ້າ. ພຽງແຕ່ຫຼັງຈາກທີ່ໄດ້ຮັບຄວາມຊັດເຈນນີ້, ເຈົ້າຈຶ່ງຈະມີທາງເຂົ້າສູ່, ເຈົ້າຈຶ່ງຈະຮູ້ຈັກເຖິງຂັ້ນຕອນນີ້ຂອງພາລະກິດ ແລະ ເຈົ້າຈຶ່ງຈະເຊື່ອຟັງຢ່າງສົມບູນ. ບໍ່ດັ່ງນັ້ນ ພວກເຈົ້າກໍຈະບໍ່ບັນລຸຄວາມເຊື່ອຟັງທີ່ແທ້ຈິງ.

# ເປັນຫຍັງເຈົ້າຈຶ່ງບໍ່ເຕັມໃຈທີ່ຈະເປັນຕົວປະກອບ?

ຄົນທີ່ຖືກເອົາຊະນະແມ່ນຕົວປະກອບ ແລະ ພຽງແຕ່ຫຼັງຈາກທີ່ຖືກເຮັດໃຫ້ສົມບູນ ຜູ້ຄົນຈຶ່ງໄດ້ກາຍເປັນແບບຢ່າງ ແລະ ຕົວຢ່າງຂອງພາລະກິດແຫ່ງຍຸກສຸດທ້າຍ. ກ່ອນທີ່ຈະຖືກເຮັດໃຫ້ສົມບູນ, ພວກເຂົາເປັນຕົວປະກອບ, ເປັນເຄື່ອງມື ພ້ອມທັງເປັນວັດຖຸເພື່ອບໍລິການ. ຄົນທີ່ຖືກພຣະເຈົ້າເອົາຊະນະທັງໝົດກໍຄືແກ້ວຜະລຶກຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ ພ້ອມທັງເປັນແບບຢ່າງ ແລະ ຕົວຢ່າງອີກດ້ວຍ. ຖ້ອຍຄຳເຫຼົ່ານີ້ທີ່ເຮົາໄດ້ໃຊ້ເພື່ອອະທິບາຍເຖິງຜູ້ຄົນອາດຈະບໍ່ມີຄວາມໝາຍ, ແຕ່ພວກມັນເປີດເຜີຍເຖິງເລື່ອງລາວທີ່ໜ້າສົນໃຈ. ພວກເຈົ້າທີ່ມີຄວາມເຊື່ອເລັກນ້ອຍຈະໂຕ້ຖຽງກ່ຽວກັບຕຳແໜ່ງທີ່ບໍ່ມີຄວາມໝາຍຢູ່ສະເໝີ ຈົນພວກເຈົ້າໜ້າແດງ ແລະ ບາງຄັ້ງ ຄວາມສຳພັນເຖິງກັບຖືກທຳລາຍຍ້ອນສິ່ງນັ້ນ. ເຖິງແມ່ນມັນເປັນພຽງຕຳແໜ່ງທີ່ເລັກນ້ອຍ, ແຕ່ໃນຄວາມຄິດຂອງພວກເຈົ້າ, ໃນຄວາມເຊື່ອຂອງພວກເຈົ້າ, ສິ່ງນີ້ບໍ່ພຽງແຕ່ໃຫຍ່ກວ່າຕຳແໜ່ງທີ່ບໍ່ສຳຄັນ ແຕ່ເປັນເລື່ອງສຳຄັນທີ່ກ່ຽວພັນກັບໂຊກຊະຕາຂອງພວກເຈົ້າ. ສະນັ້ນ ຄົນທີ່ບໍ່ມີເຫດຜົນກໍຈະມັກທົນທຸກກັບການສູນເສຍທີ່ຍິ່ງໃຫຍ່ໃນສິ່ງເລັກນ້ອຍແບບນີ້ຢູ່ສະເໝີ, ນີ້ຄືການຮັກສາເລັກນ້ອຍ ແຕ່ສູນເສຍຫຼາຍ. ຍ້ອນຕຳແໜ່ງບໍ່ສຳຄັນບາງຢ່າງເທົ່ານັ້ນ ພວກເຈົ້າກໍຈະແລ່ນໜີ ແລະ ບໍ່ກັບຄືນມາອີກ. ນີ້ກໍຍ້ອນວ່າ ພວກເຈົ້າເຫັນຊີວິດເປັນສິ່ງບໍ່ສຳຄັນ ແລະ ພວກເຈົ້າໃຫ້ຄຸນຄ່າຫຼາຍເກີນໄປໃນຊື່ທີ່ພວກເຈົ້າຖືກເອີ້ນ. ສະນັ້ນ ໃນຊີວິດຝ່າຍວິນຍານຂອງພວກເຈົ້າ ແລະ ແມ່ນແຕ່ໃນຊີວິດຕົວຈິງຂອງພວກເຈົ້າ, ພວກເຈົ້າຈຶ່ງມັກຈະມີຄວາມສັບສົນ ແລະ ເລື່ອງລາວແປກປະຫຼາດຢູ່ສະເໝີ ຍ້ອນແນວຄິດຂອງພວກເຈົ້າທີ່ກ່ຽວກັບສະຖານະ. ບາງເທື່ອ ພວກເຈົ້າຈະບໍ່ຍອມຮັບສິ່ງນີ້, ແຕ່ເຮົາຈະບອກພວກເຈົ້າວ່າ ຄົນເຫຼົ່ານີ້ແມ່ນມີແທ້ໃນຊີວິດຕົວຈິງ, ເຖິງແມ່ນວ່າ ພວກເຈົ້າຍັງບໍ່ໄດ້ຖືກເປີດໂປງແຕ່ລະຄົນເທື່ອກໍຕາມ. ສິ່ງແບບນີ້ເກີດຂຶ້ນໃນຊີວິດຂອງພວກເຈົ້າທຸກຄົນ. ຖ້າເຈົ້າບໍ່ເຊື່ອ ກໍໃຫ້ສັງເກດເບິ່ງບົດຄວາມສັ້ນຂ້າງລຸ່ມນີ້ຈາກຊີວິດຂອງເອື້ອຍນ້ອງ (ຫຼື ອ້າຍນ້ອງ). ມັນເປັນໄປໄດ້ທີ່ບຸກຄົນນີ້ອາດຈະເປັນເຈົ້າແທ້ໆ ຫຼື ບາງເທື່ອ ມັນອາດຈະເປັນບາງຄົນທີ່ເຈົ້າລົ້ງເຄີຍໃນຊີວິດຂອງເຈົ້າກໍເປັນໄດ້. ຖ້າເຮົາບໍ່ໄດ້ເຂົ້າໃຈຜິດ, ບົດຄວາມສັ້ນນີ້ອະທິບາຍເຖິງປະສົບການທີ່ເຈົ້າມີ. ບໍ່ມີຫຍັງທີ່ຂາດເຂີນໃນການອະທິບາຍ, ບໍ່ມີແມ່ນແຕ່ຄວາມຄິດ ຫຼື ແນວຄິດດຽວທີ່ຖືກຕັດອອກ, ແຕ່ທຸກສິ່ງແມ່ນຖືກບັນທຶກໄວ້ໃນເລື່ອງນີ້ທັງໝົດ. ຖ້າເຈົ້າບໍ່ເຊື່ອ ກໍໃຫ້ອ່ານມັນກ່ອນ.

ນີ້ແມ່ນປະສົບການເລັກນ້ອຍຢ່າງໜຶ່ງຈາກ "ບຸກຄົນຝ່າຍວິນຍານ".

ລາວຮູ້ສຶກກັງວົນໃຈເມື່ອລາວເຫັນວ່າ ຫຼາຍໆສິ່ງທີ່ອ້າຍເອື້ອຍນ້ອງໃນຄຣິສຕະຈັກເຮັດນັ້ນບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ, ດັ່ງນັ້ນລາວຈຶ່ງເລີ່ມຮ້າຍດ່າພວກເຂົາວ່າ: "ພວກເຈົ້າ ສິ່ງທີ່ຊົ່ວຊ້າເອີຍ! ພວກເຈົ້າບໍ່ມີຄວາມສຳນຶກເລີຍບໍ? ເປັນຫຍັງພວກເຈົ້າຈຶ່ງເຮັດໃນສິ່ງທີ່ບໍ່ມີເຫດຜົນແທ້? ແທນທີ່ຈະເຮັດໃນສິ່ງໃດກໍຕາມທີ່ພວກເຈົ້າພໍໃຈ ເປັນຫຍັງພວກເຈົ້າບໍ່ສະແຫວງຫາຄວາມຈິງ? ... ຂ້ອຍເວົ້າສິ່ງເຫຼົ່ານີ້ຕໍ່ພວກເຈົ້າ, ແຕ່ໃນເວລາດຽວກັນມັນແມ່ນຂ້ອຍເອງທີ່ຂ້ອຍກຽດຊັງ. ຂ້ອຍເຫັນວ່າ

ພຣະເຈົ້າເຜົາໄໝ້ດ້ວຍຄວາມຮ້ອນຮົນ ແລະ ຂ້ອຍກໍຮູ້ສຶກເຜົາໄໝ້ຢູ່ພາຍໃນຕົວຂ້ອຍ. ຂ້ອຍເຕັມໃຈແທ້ຈິງທີ່ຈະປະຕິບັດພາລະກິດທີ່ພຣະເຈົ້າໄດ້ຝາກຝັງໄວ້ໃຫ້ກັບຂ້ອຍຈົນເຖິງທີ່ສຸດ ແລະ ຂ້ອຍຕ້ອງການທີ່ຈະເປັນຜູ້ບໍລິການໃຫ້ພວກເຈົ້າຢ່າງແທ້ຈິງ. ມັນເປັນພຽງເພາະວ່າ ຕອນນີ້ຂ້ອຍແມ່ນອ່ອນເພຍຫຼາຍ. ພຣະເຈົ້າໄດ້ໃຊ້ເວລາກັບພວກເຮົາຢ່າງຫຼວງຫຼາຍ ແລະ ໄດ້ກ່າວພຣະທຳຢ່າງຫຼວງຫຼາຍ, ແຕ່ພວກເຮົາກໍຍັງຄືເກົ່າ. ໃນຫົວໃຈຂອງຂ້ອຍ, ຂ້ອຍຮູ້ສຶກຢູ່ສະເໝີວ່າ ຂ້ອຍຕິດໜີ້ພຣະເຈົ້າຢ່າງຫຼວງຫຼາຍ...". (ລາວເລີ່ມຮ້ອງໄຫ້ ແລະ ບໍ່ສາມາດເວົ້າຕໍ່ໄດ້). ຫຼັງຈາກນັ້ນ ລາວກໍເລີ່ມຕົ້ນອະທິຖານວ່າ: "ໂອ ພຣະເຈົ້າ! ຂ້ານ້ອຍອ້ອນວອນຂໍໃຫ້ພຣະອົງປະທານກຳລັງໃຫ້ແດ່ຂ້ານ້ອຍ ແລະ ດົນບັນດານຂ້ານ້ອຍດັ່ງທີ່ພຣະອົງບໍ່ເຄີຍກະທຳມາກ່ອນ ແລະ ຂໍໃຫ້ພຣະວິນຍານຂອງພຣະອົງປະຕິບັດພາລະກິດໃນຕົວຂ້ານ້ອຍ. ຂ້ານ້ອຍເຕັມໃຈທີ່ຈະຮ່ວມມືກັບພຣະອົງ. ຕາບໃດທີ່ພຣະອົງໄດ້ຮັບສະຫງ່າລາສີໃນເວລາສຸດທ້າຍ, ຂ້ານ້ອຍກໍເຕັມໃຈທີ່ຈະມອບຕົວຂ້ານ້ອຍເອງທັງໝົດໃຫ້ກັບພຣະອົງ, ເຖິງແມ່ນມັນໝາຍຄວາມວ່າ ຂ້ານ້ອຍຕ້ອງສະຫຼະຊີວິດຂອງຂ້ານ້ອຍກໍຕາມ. ພວກຂ້ານ້ອຍປາຖະໜາທີ່ຈະຖວາຍການສັນລະເສີນທີ່ຍິ່ງໃຫຍ່ ເພື່ອວ່າອ້າຍເອື້ອຍນ້ອງຂອງພວກຂ້ານ້ອຍຈະສາມາດຮ້ອງເພງ ແລະ ເຕັ້ນລຳດ້ວຍຄວາມປິຕິຍິນດີເພື່ອສັນລະເສີນພຣະນາມອັນບໍລິສຸດຂອງພຣະອົງ, ສັນລະເສີນພຣະອົງ, ປະຈັກພຣະອົງ, ເພື່ອຢືນຢັນວ່າພາລະກິດຂອງພຣະອົງເປັນຈິງ ແລະ ເພື່ອໃຫ້ຄວາມໃສ່ໃຈຕໍ່ພຣະອົງສຳລັບພາລະທີ່ພຣະອົງແບກຫາບ...". ລາວອະທິຖານຢ່າງຈິງໃຈແບບນີ້ ແລະ ພຣະວິນຍານບໍລິສຸດກໍມອບພາລະໃຫ້ກັບລາວແທ້ໆ. ໃນລະຫວ່າງເວລານີ້ ລາວແບກຮັບພາລະຫຼາຍ ແລະ ໃຊ້ເວລາໝົດມື້ເພື່ອອ່ານ, ຂຽນ ແລະ ຟັງ. ລາວແມ່ນຫຍຸ້ງຫຼາຍທີ່ສຸດ. ສະພາວະຝ່າຍວິນຍານຂອງລາວກໍດີເລີດ ແລະ ໃນຫົວໃຈຂອງລາວ ລາວກໍຮູ້ສຶກກະຕືລືລົ້ນ ແລະ ແບກຮັບພາລະຢູ່ສະເໝີ. ບາງຄັ້ງບາງຄາວລາວກໍອ່ອນແອ ແລະ ຕໍ່າຝາ, ແຕ່ອີກບໍ່ດົນລາວກໍຈະກັບໄປສູ່ສະພາວະປົກກະຕິຂອງລາວ. ຫຼັງຈາກເປັນແບບນີ້ຢູ່ໃນໄລຍະເວລາໃດໜຶ່ງ, ຄວາມຄືບໜ້າຂອງລາວກໍໄວຂຶ້ນ, ລາວສາມາດໄດ້ຮັບຄວາມເຂົ້າໃຈບາງຢ່າງກ່ຽວກັບພຣະທຳຫຼາຍຂໍ້ຂອງພຣະເຈົ້າ ແລະ ລາວກໍຍັງໄດ້ຮຽນຮູ້ກ່ຽວກັບເພງນະມັດສະການຢ່າງໄວວາອີກດ້ວຍ, ໂດຍລວມແລ້ວ ສະພາວະຝ່າຍວິນຍານຂອງລາວແມ່ນດີເລີດ. ເມື່ອລາວເຫັນວ່າ ຫຼາຍສິ່ງໃນຄຣິສຕະຈັກບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ, ລາວກໍກັງວົນໃຈ ແລະ ຕຳນິຕິເຕືອນອ້າຍເອື້ອຍນ້ອງຂອງລາວວ່າ: "ນີ້ຄືການອຸທິດຕໍ່ໜ້າທີ່ຂອງພວກເຈົ້າບໍ? ເປັນຫຍັງພວກເຈົ້າຈຶ່ງບໍ່ສາມາດແມ່ນແຕ່ຈ່າຍລາຄາທີ່ເລັກນ້ອຍນີ້? ຖ້າພວກເຈົ້າບໍ່ຕ້ອງການເຮັດມັນ, ຂ້ອຍຈະເຮັດເອງ...".

ໃນຂະນະທີ່ລາວມີພາລະ, ລາວຮູ້ສຶກມີພະລັງໃນຄວາມເຊື່ອເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດຫຼາຍຂຶ້ນເລື້ອຍໆ. ບາງຄັ້ງບາງຄາວ ລາວຈະພະເຊີນກັບຄວາມລຳບາກບາງຢ່າງ ແລະ ມີຄວາມຄິດລົບ, ແຕ່ລາວກໍສາມາດເອົາຊະນະສິ່ງເຫຼົ່ານີ້ໄດ້. ນັ້ນກໍຄື ເມື່ອລາວພະເຊີນກັບພາລະກິດຂອງພຣະວິນຍານບໍລິສຸດ, ແມ່ນແຕ່ເມື່ອສະພາບການຂອງລາວແມ່ນດີເລີດ ລາວກໍຍັງບໍ່ສາມາດຫຼີກເວັ້ນໃນການພົບພໍ້ກັບຄວາມລຳບາກບາງຢ່າງ ຫຼື ຄວາມອ່ອນແອລະດັບໃດໜຶ່ງໄດ້. ສິ່ງເຫຼົ່ານີ້ແມ່ນບໍ່ສາມາດຫຼີກເວັ້ນໄດ້, ແຕ່ອີກບໍ່ດົນ ລາວກໍສາມາດອອກຈາກສະພາວະເຫຼົ່ານັ້ນໄດ້. ເມື່ອລາວພະເຊີນ

ກັບຄວາມອ່ອນແອ, ລາວກໍຈະອະທິຖານ ແລະ ຮູ້ສຶກວ່າ ວຸດທິພາວະຂອງລາວເອງແມ່ນບໍ່ພຽງພໍແທ້ໆ, ແຕ່ລາວກໍເຕັມໃຈທີ່ຈະຮ່ວມມືກັບພຣະເຈົ້າ. ບໍ່ວ່າພຣະເຈົ້າເຮັດຫຍັງກໍຕາມ, ລາວກໍເຕັມໃຈທີ່ຈະປະຕິບັດຕາມຄວາມປະສົງຂອງພຣະອົງ ແລະ ເຊື່ອຟັງການຈັດແຈງທຸກຢ່າງຂອງພຣະອົງ. ບາງຄົນມີຄວາມຄິດເຫັນບາງຢ່າງ ແລະ ມີອະຄະຕິກ່ຽວກັບລາວ, ແຕ່ລາວສາມາດປ່ອຍວາງຕົນເອງ ແລະ ຮ່ວມສົນທະນາກັບພວກເຂົາຢ່າງຫ້າວຫັນ. ສິ່ງນີ້ແມ່ນສະພາວະທີ່ຜູ້ຄົນມີເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດປົກກະຕິຂອງພຣະອົງ. ຫຼັງຈາກໄລຍະເວລາໃດໜຶ່ງ ພາລະກິດຂອງພຣະເຈົ້າກໍເລີ່ມປ່ຽນແປງ ແລະ ທຸກຄົນກໍເຂົ້າສູ່ອີກຂັ້ນຕອນໜຶ່ງຂອງພາລະກິດ ເຊິ່ງພຣະເຈົ້າມີເງື່ອນໄຂທີ່ແຕກຕ່າງສຳລັບພວກເຂົາ. ສະນັ້ນ ຈຶ່ງມີການກ່າວພຣະທຳໃໝ່ທີ່ເຮັດໃຫ້ມີເງື່ອນໄຂໃໝ່ສຳລັບຜູ້ຄົນ: "... ເຮົາມີພຽງແຕ່ຄວາມກຽດຊັງສຳລັບພວກເຈົ້າ, ບໍ່ເຄີຍມີການອວຍພອນ. ເຮົາບໍ່ເຄີຍຄິດທີ່ຈະອວຍພອນພວກເຈົ້າ ຫຼື ເຮົາບໍ່ມີຄວາມຄິດທີ່ຈະເຮັດໃຫ້ພວກເຈົ້າສົມບູນ, ຍ້ອນພວກເຈົ້າກະບົດເກີນໄປ. ເພາະພວກເຈົ້າບໍ່ຊື່ສັດ ແລະ ຫຼອກລວງ ແລະ ຍ້ອນພວກເຈົ້າຂາດເຂີນໃນຄວາມສາມາດ ແລະ ພວກເຈົ້າມີສະຖານະທີ່ຕໍ່າ, ພວກເຈົ້າບໍ່ເຄີຍຢູ່ໃນສາຍຕາຂອງເຮົາ ຫຼື ຢູ່ໃນຫົວໃຈຂອງເຮົາເລີຍ. ພາລະກິດຂອງເຮົາແມ່ນປະຕິບັດດ້ວຍເຈດຕະນາທີ່ຈະປະນາມພວກເຈົ້າເທົ່ານັ້ນ; ມືຂອງເຮົາບໍ່ເຄີຍອອກຫ່າງພວກເຈົ້າຈັກເທື່ອ ຫຼື ການຂ້ຽນຕີຂອງເຮົາກໍເຊັ່ນກັນ. ເຮົາໄດ້ສືບຕໍ່ພິພາກສາ ແລະ ສາບແຊ່ງພວກເຈົ້າ. ເພາະພວກເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບເຮົາ, ຄວາມໂກດຮ້າຍຂອງເຮົາແມ່ນຢູ່ເທິງພວກເຈົ້າສະເໝີ. ເຖິງແມ່ນເຮົາປະຕິບັດພາລະກິດທ່າມກາງພວກເຈົ້າຢູ່ສະເໝີ, ພວກເຈົ້າກໍຄວນຮູ້ທ່າທີຂອງເຮົາທີ່ມີຕໍ່ພວກເຈົ້າ. ມັນບໍ່ແມ່ນຫຍັງເລີຍນອກຈາກຄວາມກຽດຊັງ, ບໍ່ມີທ່າທີ ຫຼື ຄວາມຄິດເຫັນອື່ນອີກເລີຍ. ເຮົາພຽງແຕ່ຕ້ອງການໃຫ້ພວກເຈົ້າເຮັດໜ້າທີ່ເປັນຕົວປະກອບສຳລັບສະຕິປັນຍາຂອງເຮົາ ແລະ ລິດອຳນາດທີ່ຍິ່ງໃຫຍ່ຂອງເຮົາ. ພວກເຈົ້າບໍ່ແມ່ນຫຍັງນອກຈາກເປັນຕົວປະກອບຂອງເຮົາ ເພາະຄວາມຊອບທຳຂອງເຮົາຖືກເປີດເຜີຍຜ່ານຄວາມກະບົດຂອງພວກເຈົ້າ. ເຮົາໃຫ້ພວກເຈົ້າເຮັດໜ້າທີ່ເປັນຕົວປະກອບສຳລັບພາລະກິດຂອງເຮົາ, ເພື່ອເປັນສ່ວນປະກອບໃນພາລະກິດຂອງເຮົາ...". ທັນທີທີ່ລາວເຫັນຄຳເວົ້າທີ່ວ່າ "ສ່ວນປະກອບ" ແລະ "ຕົວປະກອບ" ລາວກໍເລີ່ມຄິດວ່າ: "ເມື່ອຄຳນຶງເຖິງຄຳເວົ້າເຫຼົ່ານີ້ແລ້ວຈະໃຫ້ຂ້ານ້ອຍຕິດຕາມໄດ້ແນວໃດ? ເຖິງແມ່ນໄດ້ຈ່າຍລາຄາຢ່າງຫຼວງຫຼາຍດັ່ງກ່າວ, ຂ້ານ້ອຍກໍຍັງເປັນຕົວປະກອບຢູ່. ຕົວປະກອບບໍ່ແມ່ນພຽງຄົນບໍລິການເທົ່ານັ້ນບໍ? ໃນອະດີດ ມີການເວົ້າວ່າ ພວກຂ້ານ້ອຍຈະບໍ່ເປັນຜູ້ບໍລິການ, ແຕ່ຈະເປັນປະຊາຊົນຂອງພຣະເຈົ້າ, ແຕ່ແລ້ວໃນປັດຈຸບັນ ບໍ່ແມ່ນພວກຂ້ານ້ອຍຍັງຢູ່ໃນບົດບາດຂອງຜູ້ບໍລິການບໍ? ຄົນບໍລິການບໍ່ມີຊີວິດບໍ? ບໍ່ວ່າຂ້ານ້ອຍຕ້ອງອົດກັ້ນກັບການທົນທຸກຫຼາຍສໍ່າໃດກໍຕາມ, ພຣະເຈົ້າກໍຈະບໍ່ຍ້ອງຍໍສັນລະເສີນຂ້ານ້ອຍເພື່ອສິ່ງນັ້ນ! ຫຼັງຈາກທີ່ຂ້ານ້ອຍເຊົາເປັນຕົວປະກອບແລ້ວ, ມັນຈະບໍ່ຈົບສິ້ນບໍ? ..." ຍິ່ງລາວຄິດກ່ຽວກັບສິ່ງນັ້ນຫຼາຍສໍ່າໃດ ລາວກໍຍິ່ງທໍ້ຖອຍໃຈຫຼາຍສໍ່ານັ້ນ. ເມື່ອລາວມາຄຣິສຕະຈັກ ແລະ ເຫັນສະພາວະຂອງອ້າຍເອື້ອຍນ້ອງຂອງລາວ, ລາວກໍຍິ່ງຮູ້ສຶກບໍ່ສະບາຍໃຈ: "ພວກເຈົ້າບໍ່ສະບາຍ! ຂ້ອຍກໍບໍ່ສະບາຍ! ຂ້ອຍໄດ້ກາຍເປັນຄົນຄິດລົບ. ໂອ້ຍ! ຈະສາມາດເຮັດຫຍັງໄດ້? ພຣະເຈົ້າຍັງບໍ່ຕ້ອງການພວກເຮົາ. ໃນການປະຕິບັດພາລະກິດປະເພດນີ້,

ບໍ່ມີທາງທີ່ພຣະອົງຈະບໍ່ເຮັດໃຫ້ພວກເຮົາຄິດລົບ. ຂ້ອຍບໍ່ຮູ້ວ່າຂ້ອຍເປັນຫຍັງ. ຂ້ອຍເຖິງກັບບໍ່ຢາກອະທິຖານ. ຢ່າງໃດກໍຕາມ, ຂ້ອຍບໍ່ສະບາຍໃຈໃນຕອນນີ້ ແລະ ຂ້ອຍບໍ່ສາມາດຮວບຮວມແຮງຜັກດັນພາຍໃນຕົວຂ້ອຍໄດ້ເລີຍ. ຂ້ອຍໄດ້ອະທິຖານຫຼາຍຄັ້ງ ແຕ່ຂ້ອຍກໍຍັງເຮັດບໍ່ໄດ້ ແລະ ຂ້ອຍບໍ່ເຕັມໃຈທີ່ຈະສືບຕໍ່ເລີຍ. ນີ້ຄືສິ່ງທີ່ຂ້ອຍເຫັນ. ພຣະເຈົ້າກ່າວວ່າ ພວກເຮົາເປັນຕົວປະກອບ, ແລ້ວຕົວປະກອບບໍ່ແມ່ນເປັນພຽງຜູ້ບໍລິການບໍ? ພຣະເຈົ້າກ່າວວ່າ ພວກເຮົາແມ່ນຕົວປະກອບ, ບໍ່ແມ່ນລູກຊາຍຂອງພຣະອົງ ແລະ ພວກເຮົາກໍບໍ່ແມ່ນຄົນຂອງພຣະອົງເຊັ່ນກັນ. ພວກເຮົາບໍ່ແມ່ນລູກຊາຍຂອງພຣະອົງ, ແຮງໄກທີ່ຈະເປັນລູກຊາຍກົກຂອງພຣະອົງ. ພວກເຮົາບໍ່ໄດ້ເປັນຫຍັງເລີຍ ນອກຈາກຕົວປະກອບ. ຖ້ານັ້ນຄືສິ່ງທີ່ພວກເຮົາເປັນ, ພວກເຮົາຈະສາມາດໄດ້ຮັບຜົນຕາມມາທີ່ດີໄດ້ບໍ? ຕົວປະກອບບໍ່ມີຄວາມຫວັງ ເພາະພວກເຂົາບໍ່ມີຊີວິດ. ຖ້າພວກເຮົາເປັນລູກຊາຍຂອງພຣະອົງ, ເປັນຄົນຂອງພຣະອົງ, ແລ້ວພວກເຮົາກໍຈະມີຄວາມຫວັງ ແລະ ພວກເຮົາກໍຈະສາມາດຖືກເຮັດໃຫ້ສົມບູນໄດ້. ຕົວປະກອບສາມາດມີຊີວິດຂອງພຣະເຈົ້າໄດ້ບໍ? ພຣະເຈົ້າສາມາດມອບຊີວິດໃຫ້ກັບຄົນທີ່ບໍລິການພຣະອົງໄດ້ບໍ? ຄົນທີ່ພຣະອົງຮັກແມ່ນຄົນທີ່ມີຊີວິດຂອງພຣະອົງ ແລະ ມີພຽງລູກຊາຍ ແລະ ຄົນຂອງພຣະອົງເທົ່ານັ້ນທີ່ມີຊີວິດຂອງພຣະອົງ. ເຖິງແມ່ນຂ້ອຍຄິດລົບ ແລະ ອ່ອນແອ, ແຕ່ຂ້ອຍກໍຫວັງວ່າ ພວກເຈົ້າທຸກຄົນຈະບໍ່ຄິດລົບ. ຂ້ອຍຮູ້ວ່າການທໍ້ຖອຍ ແລະ ການຄິດລົບແບບນີ້ຈະບໍ່ສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າໄດ້, ແຕ່ຂ້ອຍບໍ່ເຕັມໃຈທີ່ຈະເປັນຕົວປະກອບ. ຂ້ອຍຢ້ານທີ່ຈະເປັນຕົວປະກອບ. ຢ່າງໃດກໍຕາມ, ຂ້ອຍບໍ່ມີກໍາລັງໃຈເຫຼືອອີກແລ້ວ ແລະ ຂ້ອຍກໍບໍ່ສາມາດດໍາເນີນຕໍ່ໄປໄດ້ອີກໃນຕອນນີ້. ຂ້ອຍຫວັງວ່າ ພວກເຈົ້າທຸກຄົນຈະບໍ່ເຮັດຄືຂ້ອຍ, ແຕ່ຈະສາມາດຮັບເອົາແຮງບັນດານໃຈບາງສ່ວນຈາກຂ້ອຍ. ຂ້ອຍຄິດວ່າ ຂ້ອຍຄວນຈະຕາຍໄປເສຍດີກວ່າ! ຂ້ອຍຈະປະຖິ້ມຖ້ອຍຄໍາສຸດທ້າຍບາງຢ່າງກ່ອນທີ່ຂ້ອຍຈະພົບກັບຄວາມຕາຍຂອງຂ້ອຍ, ຂ້ອຍຫວັງວ່າ ພວກເຈົ້າຈະສາມາດເຮັດໜ້າທີ່ເປັນຕົວປະກອບຈົນເຖິງທີ່ສຸດ; ບາງເທື່ອໃນເວລາສຸດທ້າຍ ພຣະເຈົ້າຈະສັນລະເສີນຕົວປະກອບ...". ເມື່ອອ້າຍເອື້ອຍນ້ອງເຫັນສິ່ງນີ້, ພວກເຂົາກໍແປກໃຈວ່າ: "ເປັນຫຍັງລາວຈຶ່ງຄິດລົບຫຼາຍແທ້? ໃນສອງສາມມື້ທີ່ຜ່ານມາ ລາວກໍສະບາຍດີຢູ່ບໍ່ແມ່ນບໍ? ເປັນຫຍັງລາວຈຶ່ງເສຍໃຈກະທັນຫັນ? ເປັນຫຍັງລາວຈຶ່ງບໍ່ປົກກະຕິ?" ແລ້ວລາວກໍເວົ້າວ່າ: "ຢ່າເວົ້າວ່າຂ້ອຍບໍ່ປົກກະຕິ. ຄວາມຈິງແລ້ວ, ຂ້ອຍຊັດເຈນກັບທຸກສິ່ງທີ່ຢູ່ໃນຫົວໃຈຂອງຂ້ອຍ. ຂ້ອຍຮູ້ວ່າ ຂ້ອຍບໍ່ໄດ້ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ, ແຕ່ນັ້ນບໍ່ແມ່ນຍ້ອນຂ້ອຍບໍ່ເຕັມໃຈທີ່ຈະເຮັດໜ້າທີ່ເປັນຕົວປະກອບຂອງພຣະອົງບໍ? ຂ້ອຍບໍ່ໄດ້ເຮັດສິ່ງທີ່ບໍ່ດີ. ບາງເທື່ອ ມື້ໜຶ່ງພຣະເຈົ້າຈະປ່ຽນຕໍາແໜ່ງຂອງ 'ຕົວປະກອບ' ໃຫ້ເປັນສິ່ງຖືກສ້າງຂອງພຣະອົງ ທີ່ພຣະອົງໃຊ້ໃນທາງທີ່ສໍາຄັນ. ບໍ່ມີຄວາມຫວັງເລັກນ້ອຍໃນສິ່ງນີ້ບໍ? ຂ້ອຍຫວັງວ່າ ພວກເຈົ້າຈະບໍ່ຄິດລົບ ຫຼື ໝົດກໍາລັງໃຈ ແລະ ຈະສາມາດສືບຕໍ່ຕິດຕາມພຣະເຈົ້າ ແລະ ຮັບໃຊ້ເປັນຕົວປະກອບໃຫ້ດີທີ່ສຸດ. ຢ່າງໃດກໍຕາມ, ຂ້ອຍບໍ່ສາມາດສືບຕໍ່ໄປໄດ້ອີກແລ້ວ. ຢ່າໃຫ້ການກະທໍາຂອງຂ້ອຍກີດກັ້ນພວກເຈົ້າເລີຍ". ຄົນອື່ນໄດ້ຍິນສິ່ງນັ້ນ ແລະ ເວົ້າວ່າ: ເຖິງແມ່ນເຈົ້າຢຸດຕິດຕາມພຣະອົງ, ພວກຂ້ອຍກໍຈະສືບຕໍ່ຕິດຕາມພຣະອົງ ເພາະວ່າພຣະເຈົ້າບໍ່ເຄີຍປະຕິບັດຢ່າງບໍ່ຍຸຕິທໍາຕໍ່ພວກເຮົາ. ພວກເຮົາຈະບໍ່ຖືກກີດກັ້ນດ້ວຍຄວາມຄິດລົບຂອງເຈົ້າ.

ຫຼັງຈາກທີ່ໄດ້ຜ່ານປະສົບການເປັນໄລຍະເວລາໃດໜຶ່ງ, ລາວກໍຍັງຢູ່ໃນສະພາບຄິດລົບກັບການເປັນຕົວປະກອບ, ສະນັ້ນ ເຮົາຈຶ່ງເວົ້າກັບລາວວ່າ: "ເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບພາລະກິດຂອງເຮົາເລີຍ. ເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບຄວາມຈິງພາຍໃນ, ແກ່ນແທ້ ຫຼື ຜົນເຈດຕະນາຂອງພຣະທຳຂອງເຮົາ. ເຈົ້າບໍ່ຮູ້ຈັກເປົ້າໝາຍແຫ່ງພາລະກິດຂອງເຮົາ ຫຼື ສະຕິປັນຍາໃນພາລະກິດນັ້ນ. ເຈົ້າບໍ່ມີຄວາມຢັ່ງຮູ້ກ່ຽວກັບຄວາມປະສົງຂອງເຮົາ. ເຈົ້າພຽງຮູ້ຈັກແຕ່ການທໍ້ຖອຍ ເພາະວ່າເຈົ້າຄືຕົວປະກອບ, ເຈົ້າຫຍຸ້ງຕົນເອງກັບສະຖານະຫຼາຍເກີນໄປ! ເຈົ້າຊ່າງມາໂງ່ແທ້ໆ! ເຮົາໄດ້ກ່າວຫຼາຍສິ່ງຕໍ່ເຈົ້າໃນອະດີດ. ເຮົາໄດ້ກ່າວວ່າ ເຮົາຈະເຮັດໃຫ້ເຈົ້າສົມບູນ; ເຈົ້າລືມແລ້ວບໍ? ກ່ອນທີ່ຈະເວົ້າເຖິງຕົວປະກອບ ເຮົາ ບໍ່ໄດ້ເວົ້າເຖິງການຖືກເຮັດໃຫ້ສົມບູນກ່ອນບໍ?" "ດຽວກ່ອນ, ໃຫ້ຂ້ານ້ອຍຄິດເບິ່ງກ່ອນ! ໂດຍຂ້ານ້ອຍ, ນັ້ນແມ່ນແລ້ວ! ກ່ອນທີ່ຈະເວົ້າເຖິງຕົວປະກອບ, ພຣະອົງໄດ້ກ່າວເຖິງສິ່ງນັ້ນແທ້ໆ!" "ເມື່ອເຮົາເວົ້າເຖິງການຖືກເຮັດໃຫ້ສົມບູນ, ເຮົາບໍ່ໄດ້ເວົ້າບໍວ່າ ຫຼັງຈາກທີ່ຜູ້ຄົນຖືກເອົາຊະນະເທົ່ານັ້ນ ພວກເຂົາຈຶ່ງຈະຖືກເຮັດໃຫ້ສົມບູນ?" "ໂດຍແມ່ນແລ້ວ!" "ພຣະທຳຂອງເຮົາບໍ່ຈິງໃຈບໍ? ພວກມັນບໍ່ໄດ້ຖືກກ່າວດ້ວຍຄວາມບໍລິສຸດໃຈບໍ?" "ແມ່ນແລ້ວ! ພຣະອົງເປັນພຣະເຈົ້າທີ່ບໍ່ເຄີຍເວົ້າຫຍັງທີ່ບໍ່ຊື່ສັດ, ບໍ່ມີໃຜກ້າປະຕິເສດສິ່ງນີ້ໄດ້. ແຕ່ພຣະອົງກ່າວຫຼາຍວິທີທາງທີ່ແຕກຕ່າງກັນຫຼາຍ". "ວິທີການກ່າວຂອງເຮົາບໍ່ໄດ້ປ່ຽນແປງໄປຕາມຂັ້ນຕອນຂອງພາລະກິດບໍ? ສິ່ງທີ່ເຮົາເວົ້າບໍ່ໄດ້ຖືກປະຕິບັດ ແລະ ເວົ້າໂດຍອີງຕາມຄວາມຕ້ອງການຂອງເຈົ້າບໍ?" "ພຣະອົງປະຕິບັດພາລະກິດຕາມຄວາມຕ້ອງການຂອງຜູ້ຄົນ ແລະ ພຣະອົງສະໜອງໃນສິ່ງທີ່ພວກເຂົາຕ້ອງການ. ນີ້ເປັນຄວາມຈິງ!" "ແລ້ວສິ່ງທີ່ເຮົາກ່າວກັບເຈົ້າບໍ່ເປັນປະໂຫຍດບໍ? ການຂ້ຽນຕີຂອງເຮົາບໍ່ແມ່ນເຮັດເພື່ອເຈົ້າບໍ?" "ພຣະອົງຍັງຈະເວົ້າໄດ້ແນວໃດວ່າ ມັນແມ່ນເພື່ອຕົວຂ້ານ້ອຍເອງ! ພຣະອົງຂ້ຽນຕີຂ້ານ້ອຍຈົນເກືອບຕາຍ ແລະ ຈົນຂ້ານ້ອຍບໍ່ຕ້ອງການດຳລົງຊີວິດຢູ່ອີກຕໍ່ໄປແລ້ວ. ມື້ນີ້, ພຣະອົງກ່າວສິ່ງນີ້, ມື້ອື່ນ ພຣະອົງກໍເວົ້າສິ່ງນັ້ນ. ຂ້ານ້ອຍຮູ້ວ່າການທີ່ພຣະອົງເຮັດໃຫ້ຂ້ານ້ອຍສົມບູນແມ່ນເພື່ອຕົວຂ້ານ້ອຍເອງ, ແຕ່ພຣະອົງບໍ່ໄດ້ເຮັດໃຫ້ຂ້ານ້ອຍສົມບູນເລີຍ, ພຣະອົງເຮັດໃຫ້ຂ້ານ້ອຍເປັນຕົວປະກອບ ແລະ ພຣະອົງຍັງຂ້ຽນຕີຂ້ານ້ອຍຢູ່. ພຣະອົງກຽດຊັງຂ້ານ້ອຍແມ່ນບໍ? ບໍ່ມີໃຜກ້າເຊື່ອພຣະທຳຂອງພຣະອົງ ແລະ ຕອນນີ້ ຂ້ານ້ອຍກໍໄດ້ເຫັນຢ່າງຊັດເຈນແລ້ວວ່າການຂ້ຽນຕີຂອງພຣະອົງແມ່ນພຽງເພື່ອຕັ້ງໝັ້ນໃນຄວາມກຽດຊັງໃນຫົວໃຈຂອງພຣະອົງ, ບໍ່ແມ່ນເພື່ອຊ່ວຍຂ້ານ້ອຍໃຫ້ລອດພົ້ນ. ກ່ອນໜ້ານີ້ ພຣະອົງປິດບັງຄວາມຈິງຈາກຂ້ານ້ອຍ; ພຣະອົງກ່າວວ່າ ພຣະອົງຈະເຮັດໃຫ້ຂ້ານ້ອຍສົມບູນ ແລະ ການຂ້ຽນຕີແມ່ນເພື່ອເຮັດໃຫ້ຂ້ານ້ອຍສົມບູນ. ດັ່ງນັ້ນ ຂ້ານ້ອຍຈຶ່ງໄດ້ເຊື່ອຟັງການຂ້ຽນຕີຂອງພຣະອົງຢູ່ສະເໝີ; ຂ້ານ້ອຍບໍ່ເຄີຍຄິດເລີຍວ່າ ມື້ນີ້ຂ້ານ້ອຍຈະໄດ້ຮັບຕຳແໜ່ງເປັນຕົວປະກອບ. ພຣະເຈົ້າ, ມັນຈະບໍ່ດີກວ່າບໍ ຖ້າພຣະອົງໃຫ້ຂ້ານ້ອຍເຮັດໜ້າທີ່ເປັນສິ່ງອື່ນ? ພຣະອົງຈຳເປັນຕ້ອງໃຫ້ຂ້ານ້ອຍໃສ່ໝວກຂອງຕົວປະກອບບໍ? ຂ້ານ້ອຍຂໍຍອມເປັນຜູ້ເຝົ້າປະຕູໃນສະຫວັນດີກວ່າ. ຂ້ານ້ອຍໄດ້ແລ່ນໄປມາ ແລະ ເສຍສະຫຼະຕົນເອງ, ແຕ່ສຸດທ້າຍມືຂອງຂ້ານ້ອຍກໍວ່າງເປົ່າ; ຂ້ານ້ອຍບໍ່ມີເງິນຈັກກີບເລີຍ. ແຕ່ເຖິງຢ່າງນັ້ນກໍຕາມ ແມ່ນແຕ່ໃນປັດຈຸບັນພຣະອົງຍັງບອກຂ້ານ້ອຍວ່າ ພຣະອົງຈະໃຫ້ຂ້ານ້ອຍເຮັດໜ້າທີ່ເປັນຕົວປະກອບຂອງພຣະອົງ. ແລ້ວຂ້າ

ນ້ອຍຈະຍັງສາມາດສະເໜີໜ້າຂອງຂ້ານ້ອຍໄດ້ແນວໃດ?” “ເຈົ້າເວົ້າເລື່ອງຫຍັງ? ເຮົາໄດ້ປະຕິບັດພາລະກິດແຫ່ງການພິພາກສາຢ່າງຫຼວງຫຼາຍໃນອະດີດ ແລະ ເຈົ້າບໍ່ໄດ້ເຂົ້າໃຈມັນບໍ? ເຈົ້າມີຄວາມເຂົ້າໃຈກ່ຽວກັບຕົວເຈົ້າເອງຢ່າງແທ້ຈິງຢູ່ບໍ? ຕຳແໜ່ງ ‘ຕົວປະກອບ’ ບໍ່ແມ່ນການພິພາກສາແຫ່ງພຣະທຳເຊັ່ນກັນບໍ? ເຈົ້າຄິດວ່າພາລະກິດທັງໝົດຂອງເຮົາກ່ຽວກັບຕົວປະກອບບໍ່ແມ່ນວິທີການ ແລະ ຫົນທາງແຫ່ງການພິພາກສາເຈົ້າເຊັ່ນກັນບໍ່? ແລ້ວເຈົ້າຈະຕິດຕາມເຮົາໄດ້ແນວໃດ?” “ຂ້ານ້ອຍຍັງບໍ່ໄດ້ວາງແຜນວ່າຈະຕິດຕາມພຣະອົງແນວໃດ. ກ່ອນອື່ນ ຂ້ານ້ອຍຕ້ອງຮູ້ວ່າ: ຂ້ານ້ອຍເປັນຕົວປະກອບ ຫຼື ບໍ່? ຕົວປະກອບຈະສາມາດຖືກເຮັດໃຫ້ສົມບູນໄດ້ເຊັ່ນກັນບໍ? ຕຳແໜ່ງ ‘ຕົວປະກອບ’ ຈະສາມາດຖືກປ່ຽນແປງໄດ້ບໍ? ຂ້ານ້ອຍສາມາດເປັນພະຍານຢ່າງກຶກກ້ອງຜ່ານການເປັນຕົວປະກອບ ແລະ ຫຼັງຈາກນັ້ນກາຍເປັນຄົນທີ່ຖືກເຮັດໃຫ້ສົມບູນ, ກາຍເປັນຕົວຢ່າງໃນການຮັກພຣະເຈົ້າ ແລະ ເປັນຄົນໃກ້ຊິດຂອງພຣະເຈົ້າໄດ້ບໍ? ຂ້ານ້ອຍສາມາດຖືກເຮັດໃຫ້ສົມບູນໄດ້ບໍ? ບອກຄວາມຈິງກັບຂ້ານ້ອຍເທີ້ນ!” “ເຈົ້າບໍ່ຮູ້ບໍວ່າ ສິ່ງຕ່າງໆແມ່ນພັດທະນາຢູ່ສະເໝີ ແລະ ປ່ຽນແປງຢູ່ສະເໝີ? ຕາບໃດທີ່ເຈົ້າເຕັມໃຈເຊື່ອຟັງໃນບົດບາດການເປັນຕົວປະກອບຂອງເຈົ້າໃນປັດຈຸບັນ, ແລ້ວ ເຈົ້າກໍຈະສາມາດປ່ຽນແປງໄດ້. ບໍ່ວ່າເຈົ້າຈະເປັນຕົວປະກອບ ຫຼື ບໍ່, ບໍ່ໄດ້ກ່ຽວຂ້ອງກັບໂຊກຊະຕາຂອງເຈົ້າ, ປະເດັນສຳຄັນກໍຄື ເຈົ້າສາມາດເປັນຄົນທີ່ມີການປ່ຽນແປງໃນຊີວິດ-ອຸປະນິໄສຂອງເຈົ້າ ຫຼື ບໍ່”. “ພຣະອົງສາມາດບອກຂ້ານ້ອຍໄດ້ບໍວ່າ ພຣະອົງສາມາດເຮັດໃຫ້ຂ້ານ້ອຍສົມບູນ ຫຼື ບໍ່?” “ຕາບໃດທີ່ເຈົ້າຕິດຕາມ ແລະ ເຊື່ອຟັງຈົນເຖິງທີ່ສຸດ, ເຮົາຮັບປະກັນວ່າ ເຮົາສາມາດເຮັດໃຫ້ເຈົ້າສົມບູນໄດ້”. “ແລ້ວຂ້ານ້ອຍຈະຕ້ອງຜະເຊີນກັບຄວາມທົນທຸກແບບໃດ?” “ເຈົ້າຈະປະສົບກັບຄວາມລຳບາກຍາກແຄ້ນພ້ອມກັບການພິພາກສາ ແລະ ການຂ້ຽນຕີແຫ່ງພຣະທຳ, ເຊິ່ງຄ້າຍຄືກັນກັບການຂ້ຽນຕີຈາກການເປັນຕົວປະກອບ!” “ເປັນການຂ້ຽນຕີແບບດຽວກັບຕົວປະກອບບໍ? ດີແລ້ວ, ຖ້າພຣະອົງສາມາດເຮັດໃຫ້ຂ້ານ້ອຍສົມບູນໄດ້ໂດຍຜ່ານຄວາມລຳບາກຍາກແຄ້ນ, ຖ້າມີຄວາມຫວັງ, ແລ້ວນັ້ນກໍຖືວ່າດີ. ເຖິງແມ່ນມັນຈະເປັນພຽງຄວາມຫວັງເລັກນ້ອຍ, ມັນກໍດີກວ່າການເປັນຕົວປະກອບ. ຕຳແໜ່ງ ‘ຕົວປະກອບ’ ຟັງເບິ່ງຄືເປັນຕາຢ້ານຫຼາຍ. ຂ້ານ້ອຍບໍ່ເຕັມໃຈທີ່ຈະເປັນຕົວປະກອບ!” “ມີຫຍັງທີ່ບໍ່ດີກ່ຽວກັບຕົວປະກອບບໍ? ຕົວປະກອບບໍ່ດີໃນຕົວມັນເອງບໍ? ຕົວປະກອບບໍ່ສົມຄວນໄດ້ຮັບພອນບໍ? ຖ້າເຮົາເວົ້າວ່າຕົວປະກອບສາມາດໄດ້ຮັບພອນ ເຈົ້າກໍຈະສາມາດໄດ້ຮັບພອນ. ມັນບໍ່ແມ່ນຄວາມຈິງບໍທີ່ຕຳແໜ່ງຂອງຜູ້ຄົນປ່ຽນແປງຍ້ອນພາລະກິດຂອງເຮົາ? ແຕ່ພຽງຕຳແໜ່ງຊື່ໆກໍລົບກວນເຈົ້າຫຼາຍປານນີ້ພຸ້ນບໍ? ຄວາມຈິງແລ້ວ ເຈົ້າເປັນຕົວປະກອບແບບນີ້ແມ່ນເໝາະສົມທີ່ສຸດແລ້ວ. ເຈົ້າເຕັມໃຈທີ່ຈະຕິດຕາມ ຫຼື ບໍ?” “ແລ້ວພຣະອົງສາມາດເຮັດໃຫ້ຂ້ານ້ອຍສົມບູນໄດ້ ຫຼື ບໍ່? ພຣະອົງສາມາດເຮັດໃຫ້ຂ້ານ້ອຍໄດ້ຮັບພອນຂອງພຣະອົງບໍ?” “ເຈົ້າເຕັມໃຈທີ່ຈະຕິດຕາມຈົນເຖິງທີ່ສຸດ ຫຼື ບໍ່? ເຈົ້າເຕັມໃຈທີ່ຈະຖວາຍຕົນເອງບໍ?” “ໃຫ້ຂ້ານ້ອຍຄິດເບິ່ງກ່ອນ. ຕົວປະກອບຍັງສາມາດໄດ້ຮັບພອນຂອງພຣະອົງ ແລະ ສາມາດຖືກເຮັດໃຫ້ສົມບູນ. ຫຼັງຈາກທີ່ຖືກເຮັດໃຫ້ສົມບູນ ຂ້ານ້ອຍກໍຈະເປັນຄົນໃກ້ຊິດຂອງພຣະອົງ ແລະ ເຂົ້າໃຈຄວາມປະສົງທຸກຢ່າງຂອງພຣະອົງ ແລະ ຂ້ານ້ອຍຈະມີສິ່ງທີ່ພຣະອົງມີ. ຂ້ານ້ອຍຈະ

ສາມາດເພີດເພີນກັບສິ່ງທີ່ພຣະອົງເພີດເພີນ ແລະ ຂ້ານ້ອຍຈະຮູ້ໃນສິ່ງທີ່ພຣະອົງຮູ້... ຫຼັງຈາກຜ່ານຄວາມລຳບາກຍາກແຄ້ນ ແລະ ຖືກເຮັດໃຫ້ສົມບູນ, ຂ້ານ້ອຍກໍຈະສາມາດໄດ້ຮັບພອນ. ແລ້ວຂ້ານ້ອຍຈະໄດ້ຮັບພອນຫຍັງແທ້?" "ຢ່າເປັນຫ່ວງກ່ຽວກັບວ່າແມ່ນຫຍັງຄືພອນທີ່ເຈົ້າຈະໄດ້ຮັບ. ເຖິງແມ່ນວ່າເຮົາບອກເຈົ້າ, ເຈົ້າກໍຈະບໍ່ສາມາດຈິນຕະນາການເຖິງສິ່ງເຫຼົ່ານີ້ໄດ້. ຫຼັງຈາກເປັນຕົວປະກອບທີ່ດີ, ເຈົ້າຈະຖືກເອົາຊະນະ, ເຈົ້າຈະເປັນຕົວປະກອບທີ່ປະສົບຜົນສຳເລັດ. ນີ້ແມ່ນແບບຢ່າງ ແລະ ຕົວຢ່າງຂອງຄົນທີ່ຖືກເອົາຊະນະ, ແຕ່ແນ່ນອນ ເຈົ້າພຽງສາມາດເປັນແບບຢ່າງ ແລະ ຕົວຢ່າງນັ້ນໄດ້ຫຼັງຈາກທີ່ຖືກເອົາຊະນະເທົ່ານັ້ນ". "ແບບຢ່າງ ແລະ ຕົວຢ່າງແມ່ນຫຍັງ?" "ມັນຄືແບບຢ່າງ ແລະ ຕົວຢ່າງສຳລັບຊາວຕ່າງຊາດທຸກຄົນ ນັ້ນກໍຄື ຄົນທີ່ຍັງບໍ່ຖືກເອົາຊະນະເທື່ອ". "ມີເທົ່າໃດຄົນ?" "ມີຫຼາຍຄົນ. ບໍ່ແມ່ນແຕ່ພວກເຈົ້າສີ່ ຫຼື ຫ້າພັນຄົນເທົ່ານັ້ນ, ທຸກຄົນທີ່ຍອມຮັບເອົາຊື່ນີ້ພາຍໃນຈັກກະວານທັງປວງຈະຖືກເອົາຊະນະ". "ແລ້ວມັນບໍ່ແມ່ນແຕ່ຫ້າ ຫຼື ສິບຫົວເມືອງ!" "ຢ່າກັງວົນກ່ຽວກັບສິ່ງນີ້ໃນຕອນນີ້ເລີຍ, ຢ່າເປັນຫ່ວງຕົນເອງຫຼາຍເກີນໄປ. ຈົ່ງໃສ່ໃຈກ່ຽວກັບວິທີທີ່ເຈົ້າຄວນໄດ້ຮັບການເຂົ້າສູ່ໃນຕອນນີ້! ເຮົາຮັບປະກັນວ່າ ເຈົ້າຈະສາມາດຖືກເຮັດໃຫ້ສົມບູນ". "ໃນລະດັບໃດ? ແລ້ວຂ້ານ້ອຍຈະສາມາດໄດ້ຮັບພອນຫຍັງແດ່?" "ເປັນຫຍັງເຈົ້າຈຶ່ງກັງວົນຫຼາຍແທ້? ເຮົາຮັບປະກັນແລ້ວວ່າ ເຈົ້າຈະສາມາດຖືກເຮັດໃຫ້ສົມບູນ; ເຈົ້າລືມແລ້ວບໍວ່າ ເຮົາສາມາດໄວ້ໃຈໄດ້?" "ມັນເປັນຄວາມຈິງທີ່ວ່າ ພຣະອົງສາມາດໄວ້ໃຈໄດ້, ແຕ່ວິທີການບາງຢ່າງໃນການເວົ້າຂອງພຣະອົງແມ່ນປ່ຽນແປງຢູ່ສະເໝີ. ມື້ນີ້ ພຣະອົງເວົ້າວ່າພຣະອົງຮັບປະກັນວ່າຂ້ານ້ອຍສາມາດຖືກເຮັດໃຫ້ສົມບູນ, ແຕ່ມື້ອື່ນ ພຣະອົງອາດເວົ້າວ່າ ມັນບໍ່ແນ່ນອນ. ແລ້ວສຳລັບບາງຄົນ ພຣະອົງເວົ້າວ່າ 'ເຮົາຮັບປະກັນວ່າ ຄົນແບບເຈົ້າຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້'. ຂ້ານ້ອຍບໍ່ຮູ້ວ່າແມ່ນຫຍັງເກີດຂຶ້ນກັບພຣະທຳຂອງພຣະອົງກັນແທ້. ຂ້ານ້ອຍບໍ່ກ້າທີ່ຈະເຊື່ອພຣະທຳນັ້ນແລ້ວ". "ແລ້ວເຈົ້າສາມາດຖວາຍຕົນເອງໄດ້ ຫຼື ບໍ່?" "ຖວາຍຫຍັງ?" "ຖວາຍອະນາຄົດຂອງເຈົ້າ ແລະ ຄວາມຫວັງຂອງເຈົ້າ". "ມັນງ່າຍທີ່ຈະປະຖິ້ມສິ່ງເຫຼົ່ານັ້ນ! ສິ່ງສຳຄັນກໍຄືຕຳແໜ່ງ 'ຕົວປະກອບ', ຂ້ານ້ອຍບໍ່ຕ້ອງການສິ່ງນັ້ນແທ້ໆ. ຖ້າພຣະອົງເອົາຕຳແໜ່ງ 'ຕົວປະກອບ' ນີ້ອອກຈາກຂ້ານ້ອຍ, ແລ້ວຂ້ານ້ອຍຈະເປີດຮັບເອົາທຸກສິ່ງ, ຂ້ານ້ອຍຈະເຮັດທຸກສິ່ງ. ສິ່ງເຫຼົ່ານີ້ບໍ່ແມ່ນເປັນພຽງເລື່ອງເລັກນ້ອຍບໍ? ພຣະອົງສາມາດນຳການແຕ່ງຕັ້ງນັ້ນອອກໄປໄດ້ບໍ?" "ສິ່ງນັ້ນງ່າຍຫຼາຍບໍ່ແມ່ນບໍ? ຖ້າເຮົາສາມາດມອບຕຳແໜ່ງນັ້ນໃຫ້ກັບເຈົ້າ ແນ່ນອນ ເຮົາກໍສາມາດລົບລ້າງມັນອອກໄດ້ເຊັ່ນກັນ. ແຕ່ໃນຕອນນີ້ຍັງບໍ່ແມ່ນເວລາເທື່ອ, ກ່ອນອື່ນ ເຈົ້າຕ້ອງສຳເລັດປະສົບການຂອງເຈົ້າໃນຂັ້ນຕອນນີ້ຂອງພາລະກິດກ່ອນ ແລະ ມີພຽງເມື່ອນັ້ນ ເຈົ້າຈຶ່ງຈະໄດ້ຮັບຕຳແໜ່ງໃໝ່. ຍິ່ງມີຄົນເປັນຄືກັບເຈົ້າຫຼາຍສໍ່າໃດ, ພວກເຂົາກໍຍິ່ງຈຳເປັນຕ້ອງເປັນຕົວປະກອບຫຼາຍສໍ່ານັ້ນ. ຍິ່ງເຈົ້າຢ້ານທີ່ຈະເປັນຕົວປະກອບຫຼາຍສໍ່າໃດ, ເຮົາກໍຍິ່ງຈະເອີ້ນວ່າເຈົ້າເປັນແບບນັ້ນຫຼາຍສໍ່ານັ້ນ. ຄົນແບບເຈົ້າຕ້ອງຖືກລົງວິໄນ ແລະ ຖືກຈັດການຢ່າງເຄັ່ງຄັດ. ຍິ່ງຄົນກະບົດຫຼາຍສໍ່າໃດ, ພວກເຂົາກໍຍິ່ງເປັນຄົນບໍລິການຫຼາຍສໍ່ານັ້ນ ແລະ ໃນທີ່ສຸດ ພວກເຂົາກໍຈະບໍ່ໄດ້ຮັບຫຍັງເລີຍ". "ໃນເມື່ອຂ້ານ້ອຍສະແຫວງຫາຢ່າງພາກພຽນຂະໜາດນີ້, ເປັນຫຍັງຂ້ານ້ອຍຈຶ່ງບໍ່ສາມາດໂຍນຖິ້ມຊື່ຂອງ 'ຕົວປະກອບ' ໄດ້? ພວກຂ້ານ້ອຍໄດ້

ຕິດຕາມພຣະອົງຕະຫຼອດເວລາຫຼາຍປີ ແລະ ໄດ້ທົນທຸກຢ່າງໃຫຍ່ຫຼວງ. ພວກຂ້ານ້ອຍໄດ້ເຮັດຫຼາຍສິ່ງເພື່ອພຣະອົງ. ພວກຂ້ານ້ອຍໄດ້ຜ່ານທ່າມກາງສາຍລົມ ແລະ ສາຍຝົນ; ພວກຂ້ານ້ອຍໃກ້ຈະໝົດຄວາມເປັນໄວໜຸ່ມຂອງພວກຂ້ານ້ອຍແລ້ວ. ພວກຂ້ານ້ອຍບໍ່ໄດ້ແຕ່ງດອງ ຫຼື ເລີ່ມສ້າງຄອບຄົວ ແລະ ໃນບັນດາພວກຂ້ານ້ອຍທີ່ໄດ້ເຮັດແບບນັ້ນ ພວກເຂົາກໍຍັງໄດ້ດີ. ຂ້ານ້ອຍຢູ່ໃນໂຮງຮຽນຕະຫຼອດເຖິງມັດທະຍົມຕອນປາຍ; ທັນທີທີ່ຂ້ານ້ອຍໄດ້ຍິນວ່າ ພຣະອົງສະເດັດມາ, ຂ້ານ້ອຍກໍສະຫຼະໂອກາດທີ່ຂ້ານ້ອຍຈະໄປຮຽນຕໍ່ມະຫາວິທະຍາໄລ. ແລ້ວພຣະອົງເວົ້າວ່າພວກຂ້ານ້ອຍເປັນຕົວປະກອບ! ພວກຂ້ານ້ອຍໄດ້ສູນເສຍຫຼາຍຢ່າງ! ພວກຂ້ານ້ອຍເຮັດທຸກສິ່ງເຫຼົ່ານີ້ ແຕ່ໃນທີ່ສຸດພວກຂ້ານ້ອຍກໍເປັນໄດ້ພຽງແຕ່ຕົວປະກອບຂອງພຣະອົງ. ສິ່ງນີ້ຈະເຮັດໃຫ້ເພື່ອນຮ່ວມຫ້ອງທີ່ຜ່ານມາ ແລະ ໝູ່ເພື່ອນຂອງຂ້ານ້ອຍຄິດແນວໃດກັບຂ້ານ້ອຍ? ເມື່ອພວກເຂົາເຫັນຂ້ານ້ອຍ ແລະ ຖາມກ່ຽວກັບຕຳແໜ່ງຂອງຂ້ານ້ອຍ ແລະ ສະຖານະຂອງຂ້ານ້ອຍ, ຂ້ານ້ອຍຈະບໍ່ອັບອາຍທີ່ຈະບອກພວກເຂົາໄດ້ແນວໃດ? ໃນຕອນທຳອິດ, ຂ້ານ້ອຍຈ່າຍລາຄາທຸກຢ່າງ ຍ້ອນຄວາມເຊື່ອທີ່ຂ້ານ້ອຍມີໃນພຣະອົງ ແລະ ຄົນອື່ນກໍລ້ວນແລ້ວແຕ່ເຍາະເຍີ້ຍວ່າ ຂ້ານ້ອຍເປັນຄົນໂງ່. ແຕ່ຂ້ານ້ອຍກໍຍັງຕິດຕາມ ແລະ ລໍຖ້າເວລາທີ່ມື້ຂອງຂ້ານ້ອຍມາເຖິງ ມື້ທີ່ຂ້ານ້ອຍຈະໄດ້ສະແດງໃຫ້ກັບທຸກຄົນທີ່ບໍ່ເຊື່ອນັ້ນເຫັນ. ແຕ່ກົງກັນຂ້າມ, ມື້ນີ້ພຣະອົງບອກຂ້ານ້ອຍວ່າຂ້ານ້ອຍເປັນຕົວປະກອບ. ຖ້າພຣະອົງມອບຕຳແໜ່ງທີ່ຕໍ່າຕ້ອຍທີ່ສຸດໃຫ້ກັບຂ້ານ້ອຍ, ຖ້າພຣະອົງອະນຸຍາດໃຫ້ຂ້ານ້ອຍເປັນໜຶ່ງໃນປະຊາຊົນແຫ່ງອານາຈັກ, ມັນກໍຈະດີກວ່ານີ້ຫຼາຍ! ເຖິງແມ່ນວ່າ ຂ້ານ້ອຍບໍ່ສາມາດເປັນສາວົກຂອງພຣະອົງ ຫຼື ຄົນໄວ້ໃຈຂອງພຣະອົງ, ຂ້ານ້ອຍກໍຈະດີໃຈທີ່ໄດ້ເປັນພຽງຜູ້ຕິດຕາມຂອງພຣະອົງ! ພວກຂ້ານ້ອຍໄດ້ຕິດຕາມພຣະອົງຕະຫຼອດເວລາທີ່ຜ່ານມາ, ສະຫຼະຄອບຄົວຂອງພວກຂ້ານ້ອຍ ແລະ ມັນກໍຍາກຫຼາຍທີ່ຈະສືບຕໍ່ສະແຫວງຫາຈົນມາຮອດປັດຈຸບັນ ແລະ ສິ່ງດຽວທີ່ພວກຂ້ານ້ອຍມີກໍພຽງແຕ່ຕຳແໜ່ງ 'ຕົວປະກອບ'! ຂ້ານ້ອຍໄດ້ປະຖິ້ມທຸກສິ່ງເພື່ອພຣະອົງ; ຂ້ານ້ອຍໄດ້ສະຫຼະຄວາມຮັ່ງມີທາງໂລກທຸກຢ່າງ. ແຕ່ກ່ອນ ມີບາງຄົນແນະນຳຄູ່ຮັກໃຫ້ກັບຂ້ານ້ອຍ. ລາວເປັນຄົນເຈົ້າຊູ້ ແລະ ແຕ່ງຕົວດີຫຼາຍ; ລາວເປັນລູກຊາຍຂອງພະນັກງານລັດລະດັບສູງຄົນໜຶ່ງ. ໃນເວລານັ້ນ ຂ້ານ້ອຍກໍສົນໃຈໃນຕົວລາວ. ແຕ່ທັນທີທີ່ຂ້ານ້ອຍໄດ້ຍິນວ່າພຣະເຈົ້າປາກົດຕົວ ແລະ ກຳລັງປະຕິບັດພາລະກິດຂອງພຣະອົງ, ພຣະອົງຈະນຳພາພວກຂ້ານ້ອຍເຂົ້າສູ່ອານາຈັກ ແລະ ເຮັດໃຫ້ພວກຂ້ານ້ອຍສົມບູນ ແລະ ພຣະອົງຂໍໃຫ້ພວກຂ້ານ້ອຍມີຄວາມເດັດດ່ຽວ ແລະ ປະຖິ້ມທຸກສິ່ງໄວ້ເບື້ອງຫຼັງໂດຍໄວ, ຫຼັງຈາກທີ່ຂ້ານ້ອຍໄດ້ຍິນແບບນັ້ນ ຂ້ານ້ອຍກໍເຫັນວ່າ ຂ້ານ້ອຍຂາດຄວາມເດັດດ່ຽວຫຼາຍ. ດັ່ງນັ້ນ ຂ້ານ້ອຍຈຶ່ງແຂງໃຈປະຕິເສດໂອກາດດັ່ງກ່າວນັ້ນ. ຫຼັງຈາກນັ້ນ ລາວກໍສົ່ງຂອງຂວັນມາໃຫ້ຄອບຄົວຂອງຂ້ານ້ອຍສອງສາມຄັ້ງ, ແຕ່ຂ້ານ້ອຍກໍບໍ່ໄດ້ເບິ່ງຂອງຂວັນເຫຼົ່ານັ້ນເລີຍ. ພຣະອົງຄິດວ່າ ໃນເວລານັ້ນ ຂ້ານ້ອຍເສຍໃຈບໍ? ມັນເປັນສິ່ງທີ່ດີຫຼາຍ ແລະ ສຸດທ້າຍມັນກໍບໍ່ມີຫຍັງເກີດຂຶ້ນເລີຍ. ຂ້ານ້ອຍຈະບໍ່ເສຍໃຈໄດ້ແນວໃດ? ຂ້ານ້ອຍເສຍໃຈກ່ຽວກັບສິ່ງນັ້ນເປັນເວລາສອງສາມມື້ ຈົນເຖິງຂັ້ນທີ່ຂ້ານ້ອຍບໍ່ສາມາດນອນຫຼັບໃນຕອນກາງຄືນໄດ້, ແຕ່ໃນທີ່ສຸດ ຂ້ານ້ອຍກໍປ່ອຍມັນໄປ. ທຸກຄັ້ງທີ່ຂ້ານ້ອຍອະທິຖານ ຂ້ານ້ອຍຖືກດົນໃຈໂດຍພຣະວິນຍານບໍລິສຸດ, ພຣະອົງກ່າວວ່າ:

'ເຈົ້າເຕັມໃຈທີ່ຈະເສຍສະຫຼະທຸກສິ່ງເພື່ອເຮົາບໍ? ເຈົ້າເຕັມໃຈທີ່ຈະເສຍສະຫຼະຕົນເອງເພື່ອເຮົາບໍ?' ເວລາໃດທີ່ຂ້ານ້ອຍຄິດກ່ຽວກັບພຣະທຳເຫຼົ່ານັ້ນຂອງພຣະອົງ ຂ້ານ້ອຍກໍຈະຮ້ອງໄຫ້. ຂ້ານ້ອຍຖືກດົນບັນດານໃຈ ແລະ ຮ້ອງໄຫ້ດ້ວຍຄວາມໂສກເສົ້າຫຼາຍຄັ້ງຈົນຂ້ານ້ອຍບໍ່ຈື່. ໜຶ່ງປີຫຼັງຈາກນັ້ນ ຂ້ານ້ອຍກໍໄດ້ຍິນວ່າລາວໄດ້ແຕ່ງດອງແລ້ວ. ແນ່ນອນ ຂ້ານ້ອຍທຸກທໍລະມານຫຼາຍ, ແຕ່ຂ້ານ້ອຍກໍຍັງປ່ອຍໃຫ້ຜ່ານໄປເພື່ອເຫັນແກ່ພຣະອົງ. ທັງໝົດນີ້ຍັງບໍ່ໄດ້ເອີ່ຍເຖິງອາຫານ ແລະ ເສື້ອຜ້າຂອງຂ້ານ້ອຍເລີຍທີ່ຂາດເຂີນຫຼາຍ. ຂ້ານ້ອຍສະຫຼະການແຕ່ງດອງນັ້ນ, ຂ້ານ້ອຍສະຫຼະທຸກສິ່ງນີ້ ເພື່ອວ່າພຣະອົງຈະບໍ່ໃຫ້ຂ້ານ້ອຍເຮັດໜ້າທີ່ເປັນຕົວປະກອບ! ຂ້ານ້ອຍສະຫຼະການແຕ່ງດອງຂອງຂ້ານ້ອຍ ເຊິ່ງເປັນເຫດການທີ່ສຳຄັນທີ່ສຸດໃນຊີວິດຂອງຂ້ານ້ອຍ, ທັງໝົດນີ້ກໍເພື່ອເປັນການຖວາຍຕົວຂ້ານ້ອຍເອງໃຫ້ກັບພຣະອົງ! ຊົ່ວຊີວິດຂອງຄົນໆໜຶ່ງບໍ່ມີຫຍັງນອກຈາກຊອກຫາຄູ່ຮັກທີ່ດີ ແລະ ມີຄອບຄົວທີ່ມີຄວາມສຸກ. ຂ້ານ້ອຍປະຖິ້ມສິ່ງນີ້ ເຊິ່ງເປັນສິ່ງທີ່ດີທີ່ສຸດ ແລະ ຕອນນີ້ ຂ້ານ້ອຍແມ່ນບໍ່ມີຫຍັງ ແລະ ຂ້ານ້ອຍກໍຢູ່ຄົນດຽວ. ພຣະອົງຈະໃຫ້ຂ້ານ້ອຍໄປໃສ? ຂ້ານ້ອຍທົນທຸກຕັ້ງແຕ່ຂ້ານ້ອຍເລີ່ມຕິດຕາມພຣະອົງ. ຂ້ານ້ອຍບໍ່ໄດ້ມີຊີວິດທີ່ດີເລີຍ. ຂ້ານ້ອຍສະຫຼະຄອບຄົວຂອງຂ້ານ້ອຍ ແລະ ອາຊີບຂອງຂ້ານ້ອຍ ພ້ອມທັງຄວາມສຸກທຸກຢ່າງທາງເນື້ອໜັງ ແລະ ການເສຍສະຫຼະນີ້ທີ່ພວກຂ້ານ້ອຍທຸກຄົນໄດ້ເຮັດຍັງບໍ່ພຽງພໍທີ່ຈະໄດ້ຮັບພອນຂອງພຣະອົງບໍ? ແລ້ວຕອນນີ້ ກໍມີສິ່ງ 'ຕົວປະກອບ' ນີ້ເກີດຂຶ້ນອີກ. ພຣະເຈົ້າເອີຍ, ພຣະອົງໄດ້ເຮັດເກີນໄປຫຼາຍ! ເບິ່ງພວກຂ້ານ້ອຍແມະ, ພວກຂ້ານ້ອຍບໍ່ມີຫຍັງໃຫ້ເພິ່ງພາໃນໂລກນີ້ເລີຍ. ພວກຂ້ານ້ອຍບາງຄົນສະຫຼະລູກຫຼານຂອງພວກຂ້ານ້ອຍ, ບາງຄົນສະຫຼະວຽກງານຂອງພວກຂ້ານ້ອຍ ແລະ ສະຫຼະຄູ່ສົມລົດຂອງພວກຂ້ານ້ອຍ[ກ] ແລະ ອື່ນໆອີກ; ພວກຂ້ານ້ອຍໄດ້ສະຫຼະຄວາມສຸກທຸກຢ່າງທາງເນື້ອໜັງ. ມີຄວາມຫວັງຫຍັງອີກສຳລັບພວກຂ້ານ້ອຍ? ພວກຂ້ານ້ອຍຈະສືບຕໍ່ຢູ່ລອດໃນໂລກນີ້ໄດ້ແນວໃດ? ການເສຍສະຫຼະເຫຼົ່ານີ້ທີ່ພວກຂ້ານ້ອຍໄດ້ເຮັດບໍ່ມີຄຸນຄ່າແມ່ນແຕ່ເງິນເຟັນນີຫຼຽນດຽວບໍ? ພຣະອົງບໍ່ສາມາດເຫັນສິ່ງນັ້ນເລີຍບໍ? ສະຖານະຂອງພວກຂ້ານ້ອຍກໍຕໍ່າຕ້ອຍ ແລະ ຄວາມສາມາດກໍຂາດເຂີນ, ພວກຂ້ານ້ອຍຍອມຮັບສິ່ງນີ້ ແຕ່ມີເມື່ອໃດແດ່ທີ່ພວກຂ້ານ້ອຍບໍ່ເຄີຍໃສ່ໃຈໃນສິ່ງທີ່ພຣະອົງຕ້ອງການໃຫ້ພວກຂ້ານ້ອຍເຮັດ? ແລ້ວບັດນີ້ ພຣະອົງປະຖິ້ມພວກຂ້ານ້ອຍຢ່າງໄຮ້ຄວາມປານີ ແລະ 'ຕອບແທນ' ພວກຂ້ານ້ອຍດ້ວຍຕຳແໜ່ງ 'ຕົວປະກອບ' ບໍ? ການເສຍສະຫຼະຂອງພວກຂ້ານ້ອຍໄດ້ນຳພວກຂ້ານ້ອຍໃຫ້ໄດ້ພຽງເທົ່ານີ້ບໍ? ສຸດທ້າຍ ຖ້າຜູ້ຄົນຖາມຂ້ານ້ອຍວ່າ ຂ້ານ້ອຍໄດ້ຮັບຫຍັງຈາກການເຊື່ອໃນພຣະເຈົ້າ, ຂ້ານ້ອຍສາມາດໃຫ້ພວກເຂົາເຫັນຄຳວ່າ 'ຕົວປະກອບ' ນີ້ໄດ້ແທ້ບໍ? ຂ້ານ້ອຍຈະສາມາດອ້າປາກຂອງຂ້ານ້ອຍແລ້ວເວົ້າວ່າ ຂ້ານ້ອຍເປັນຕົວປະກອບໄດ້ແນວໃດ? ຂ້ານ້ອຍບໍ່ສາມາດອະທິບາຍສິ່ງນັ້ນໃຫ້ກັບພໍ່ແມ່ຂອງຂ້ານ້ອຍໄດ້ ແລະ ຂ້ານ້ອຍບໍ່ສາມາດອະທິບາຍສິ່ງນັ້ນໃຫ້ກັບຄູ່ຮັກເກົ່າຂອງຂ້ານ້ອຍໄດ້. ຂ້ານ້ອຍໄດ້ຈ່າຍລາຄາຢ່າງສູງ ແລະ ສິ່ງທີ່ຂ້ານ້ອຍໄດ້ຮັບເປັນການຕອບແທນກໍຄືການເປັນຕົວປະກອບ! ໂອ້ຍ! ຂ້ານ້ອຍຮູ້ສຶກເສຍໃຈຫຼາຍ!" (ລາວເລີ່ມຕົບກົກຂາຂອງ

ກ ຂໍ້ຄວາມຕົ້ນສະບັບອ່ານວ່າ "ເມຍ".

ລາວ ແລ້ວຮ້ອງໄຫ້ຂຶ້ນ). “ຖ້າເຮົາກ່າວວ່າ ບັດນີ້ເຮົາຈະບໍ່ມອບຕຳແໜ່ງຕົວປະກອບໃຫ້ກັບເຈົ້າ ແຕ່ກົງກັນຂ້າມ ຈະເຮັດໃຫ້ເຈົ້າເປັນໜຶ່ງໃນປະຊາຊົນຂອງເຮົາ ແລະ ແນະນຳໃຫ້ເຈົ້າດຳເນີນການເຜີຍແຜ່ຂ່າວປະເສີດ, ຖ້າເຮົາມອບສະຖານະເພື່ອໃຫ້ເຈົ້າໄປປະຕິບັດພາລະກິດ, ເຈົ້າຈະສາມາດເຮັດມັນໄດ້ບໍ? ເຈົ້າໄດ້ຮັບຫຍັງແທ້ຈາກແຕ່ລະຂັ້ນຕອນຂອງພາລະກິດນີ້? ແຕ່ແລ້ວເຈົ້າກໍຍັງບັນເທິງເຮົາດ້ວຍເລື່ອງລາວຂອງເຈົ້າ, ເຈົ້າຊ່າງບໍ່ມີຢາງອາຍ! ເຈົ້າເວົ້າວ່າ ເຈົ້າໄດ້ຈ່າຍລາຄາ ແຕ່ບໍ່ໄດ້ຮັບຫຍັງເລີຍ. ເປັນໄປໄດ້ບໍ ທີ່ເຮົາລືມບອກເຈົ້າໄປວ່າ ເງື່ອນໄຂຂອງເຮົາທີ່ຈະຮັບເອົາຄົນໆໜຶ່ງຄືຫຍັງ? ພາລະກິດຂອງເຮົາແມ່ນສຳລັບໃຜ? ເຈົ້າຮູ້ບໍ? ນີ້ ເຈົ້າກຳລັງຮື້ຟື້ນຄຳຮ້ອງທຸກເດີມໆຂອງເຈົ້າ! ເຈົ້າຍັງຖືວ່າເປັນມະນຸດອີກຕໍ່ໄປຢູ່ບໍ? ເຈົ້າບໍ່ໄດ້ຍອມຮັບເອົາຄວາມທຸກທີ່ເຈົ້າໄດ້ປະສົບດ້ວຍຄວາມສະໝັກໃຈຂອງເຈົ້າເອງບໍ? ແລ້ວການຍອມທົນທຸກຂອງເຈົ້າບໍ່ແມ່ນເພື່ອໄດ້ຮັບພອນບໍ? ເຈົ້າໄດ້ບັນລຸເງື່ອນໄຂຂອງເຮົາແລ້ວບໍ? ສິ່ງທີ່ເຈົ້າຕ້ອງການແມ່ນການໄດ້ຮັບພອນເທົ່ານັ້ນ. ເຈົ້າຊ່າງບໍ່ມີຢາງອາຍເລີຍ! ມີຕອນໃດທີ່ເງື່ອນໄຂຂອງເຮົາສຳລັບເຈົ້າເປັນການບັງຄັບແດ່? ຖ້າເຈົ້າເຕັມໃຈທີ່ຈະຕິດຕາມເຮົາ ເຈົ້າຕ້ອງເຊື່ອຟັງເຮົາໃນທຸກສິ່ງ. ຢ່າພະຍາຍາມຕໍ່ລອງກັບເງື່ອນໄຂ. ຄວາມຈິງແລ້ວ, ເຮົາໄດ້ບອກເຈົ້າກ່ອນໜ້ານີ້ແລ້ວວ່າ ເສັ້ນທາງນີ້ແມ່ນເສັ້ນທາງແຫ່ງຄວາມທຸກທໍລະມານ. ມັນເຕັມໄປດ້ວຍໂອກາດທີ່ມືດມົວ, ດ້ວຍຄວາມຫວັງທີ່ເລັກນ້ອຍ. ເຈົ້າລືມແລ້ວບໍ? ເຮົາໄດ້ເວົ້າສິ່ງນີ້ຫຼາຍຄັ້ງແລ້ວ. ຖ້າເຈົ້າເຕັມໃຈທີ່ຈະທົນທຸກ ແລ້ວໃຫ້ຕິດຕາມເຮົາ. ຖ້າເຈົ້າບໍ່ເຕັມໃຈທີ່ຈະທົນທຸກ ກໍໃຫ້ຢຸດ. ເຮົາບໍ່ໄດ້ບັງຄັບເຈົ້າ, ເຈົ້າມີອິດສະຫຼະທີ່ຈະມາ ຫຼື ໄປ! ເຖິງຢ່າງໃດກໍຕາມ, ນີ້ແມ່ນວິທີການປະຕິບັດພາລະກິດຂອງເຮົາ ແລະ ເຮົາບໍ່ສາມາດເຮັດໃຫ້ພາລະກິດຂອງເຮົາທັງໝົດຊັກຊ້າຍ້ອນຄວາມກະບົດສ່ວນຕົວຂອງເຈົ້າ. ເຈົ້າອາດບໍ່ເຕັມໃຈທີ່ຈະເຊື່ອຟັງ, ແຕ່ມີຄົນອື່ນທີ່ເຕັມໃຈ. ພວກເຈົ້າລ້ວນແລ້ວແຕ່ເປັນຄົນທີ່ສິ້ນຫວັງ! ເຈົ້າບໍ່ຢ້ານຫຍັງເລີຍ! ເຈົ້າກຳລັງຕໍ່ລອງເງື່ອນໄຂກັບເຮົາ, ເຈົ້າຕ້ອງການດຳລົງຊີວິດຢູ່ຕໍ່ໄປ ຫຼື ບໍ່? ເຈົ້າວາງແຜນເພື່ອຕົວເຈົ້າເອງ ແລະ ທະເຍີທະຍານເພື່ອຊື່ສຽງ ແລະ ຜົນປະໂຫຍດຂອງເຈົ້າເອງ. ພາລະກິດທັງໝົດຂອງເຮົາບໍ່ແມ່ນເພື່ອພວກເຈົ້າບໍ? ເຈົ້າຕາບອດບໍ? ກ່ອນທີ່ເຮົາກາຍມາເປັນເນື້ອໜັງ ເຈົ້າບໍ່ສາມາດເຫັນເຮົາໄດ້ ແລະ ຄຳເວົ້າເຫຼົ່ານັ້ນທີ່ເຈົ້າເວົ້າກໍຈະສາມາດໃຫ້ອະໄພໄດ້, ແຕ່ບັດນີ້ ເຮົາບັງເກີດເປັນມະນຸດ ແລະ ເຮົາກຳລັງປະຕິບັດພາລະກິດທ່າມກາງພວກເຈົ້າ, ແຕ່ພວກເຈົ້າຍັງບໍ່ສາມາດເຫັນບໍ? ແມ່ນຫຍັງທີ່ເຈົ້າບໍ່ເຂົ້າໃຈ? ເຈົ້າເວົ້າວ່າ ເຈົ້າໄດ້ທົນທຸກຕໍ່ການສູນເສຍ; ແລ້ວເຮົາກໍໄດ້ກາຍມາເປັນເນື້ອໜັງເພື່ອຊ່ວຍພວກເຈົ້າຜູ້ທີ່ສິ້ນຫວັງໃຫ້ລອດພົ້ນ ແລະ ໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍ ແລະ ຈົນຮອດປັດຈຸບັນ ເຈົ້າກໍຍັງຕໍ່ວ່າ, ເຈົ້າຈະເວົ້າໄດ້ບໍ່ວ່າເຮົາກໍໄດ້ທົນທຸກ? ສິ່ງທີ່ເຮົາໄດ້ເຮັດບໍ່ແມ່ນລ້ວນແລ້ວແຕ່ເພື່ອພວກເຈົ້າບໍ? ເຮົາໃຫ້ຕຳແໜ່ງນີ້ກັບຜູ້ຄົນ ອີງຕາມວຸດທິພາວະໃນປັດຈຸບັນຂອງພວກເຂົາ. ຖ້າເຮົາເອີ້ນເຈົ້າວ່າ ‘ຕົວປະກອບ’, ເຈົ້າກໍເປັນຕົວປະກອບທັນທີ. ເຊັ່ນດຽວກັນ ຖ້າເຮົາເອີ້ນເຈົ້າວ່າ ‘ປະຊາຊົນຂອງພຣະເຈົ້າ’, ເຈົ້າກໍຈະເປັນປະຊາຊົນຂອງພຣະເຈົ້າທັນທີ. ບໍ່ວ່າເຮົາຈະເອີ້ນເຈົ້າສິ່ງໃດກໍຕາມ, ເຈົ້າກໍຈະເປັນສິ່ງນັ້ນ. ສິ່ງນີ້ບໍ່ໄດ້ບັນລຸໂດຍພຣະທຳສອງສາມຂໍ້ຈາກປາກຂອງເຮົາບໍ? ແລ້ວພຣະທຳສອງສາມຂໍ້ເຫຼົ່ານີ້ຂອງເຮົາເຮັດໃຫ້ເຈົ້າໃຈຮ້າຍຫຼາຍປານນັ້ນພຸ້ນບໍ? ຖ້າເປັນແບບນັ້ນ

ກໍອະໄພໃຫ້ກັບເຮົາດ້ວຍ! ຖ້າເຈົ້າບໍ່ເຊື່ອຟັງໃນຕອນນີ້, ສຸດທ້າຍ ເຈົ້າກໍຈະຖືກສາບແຊ່ງ, ແລ້ວເຈົ້າຈະມີຄວາມສຸກບໍໃນຕອນນັ້ນ? ເຈົ້າບໍ່ໃສ່ໃຈຕໍ່ຫົນທາງແຫ່ງຊີວິດ ແຕ່ພຽງໃສ່ໃຈກັບສະຖານະ ແລະ ຕຳແໜ່ງຂອງເຈົ້າ; ຊີວິດຂອງເຈົ້າຈະເປັນແນວໃດ? ເຮົາບໍ່ປະຕິເສດວ່າ ເຈົ້າໄດ້ຈ່າຍລາຄາຢ່າງໃຫຍ່ຫຼວງ, ແຕ່ໃຫ້ສັງເກດເບິ່ງວຸດທິພາວະ ແລະ ການປະຕິບັດຂອງເຈົ້າເອງເບິ່ງ ແລະ ແມ່ນແຕ່ຕອນນີ້ເຈົ້າກໍຍັງພະຍາຍາມທີ່ຈະຕໍ່ລອງກັບເງື່ອນໄຂ. ນີ້ແມ່ນວຸດທິພາວະທີ່ເຈົ້າໄດ້ຮັບຕະຫຼອດການຕັ້ງໃຈຂອງເຈົ້າບໍ? ເຈົ້າຍັງມີຄວາມຊື່ສັດຢູ່ບໍ? ເຈົ້າມີຄວາມສຳນຶກຢູ່ບໍ? ແມ່ນເຮົາບໍທີ່ເປັນຜູ້ເຮັດຜິດ? ເງື່ອນໄຂທີ່ເຮົາມີສຳລັບເຈົ້ານັ້ນຜິດບໍ? ແລ້ວມັນແມ່ນຫຍັງ? ເຮົາຈະໃຫ້ເຈົ້າເຮັດໜ້າທີ່ເປັນຕົວປະກອບພຽງສອງສາມມື້ ແຕ່ເຈົ້າກໍບໍ່ເຕັມໃຈທີ່ຈະເຮັດ. ນັ້ນແມ່ນຄວາມຕັ້ງໃຈປະເພດໃດ? ພວກເຈົ້າລ້ວນແລ້ວແຕ່ມີຈິດໃຈອ່ອນແອ, ພວກເຈົ້າຂີ້ຢ້ານ! ການລົງໂທດຄົນແບບເຈົ້າແມ່ນເລື່ອງປົກກະຕິ!” ຫຼັງຈາກທີ່ເຮົາໄດ້ກ່າວສິ່ງນີ້, ລາວກໍບໍ່ໄດ້ເວົ້າຫຍັງອີກ.

ເມື່ອພະເຊີນກັບພາລະກິດປະເພດນີ້ໃນປັດຈຸບັນ, ພວກເຈົ້າຕ້ອງມີຄວາມເຂົ້າໃຈບາງຢ່າງກ່ຽວກັບຂັ້ນຕອນໃນພາລະກິດຂອງພຣະເຈົ້າ ແລະ ວິທີການປ່ຽນແປງຜູ້ຄົນຂອງພຣະອົງ. ນີ້ແມ່ນວິທີດຽວທີ່ຈະບັນລຸຜົນໃນການປ່ຽນແປງ. ໃນການສະແຫວງຫາຂອງພວກເຈົ້າ, ພວກເຈົ້າມີແນວຄິດ, ຄວາມຫວັງ ແລະ ອະນາຄົດສ່ວນຕົວຫຼາຍເກີນໄປ. ພາລະກິດໃນປັດຈຸບັນແມ່ນເພື່ອຈັດການກັບຄວາມປາຖະໜາຂອງພວກເຈົ້າສຳລັບສະຖານະ ແລະ ຄວາມປາຖະໜາທີ່ເກີນຂອບເຂດຂອງພວກເຈົ້າ. ຄວາມຫວັງ, ສະຖານະ ແລະ ແນວຄິດຕ່າງໆລ້ວນແລ້ວແຕ່ເປັນຕົວແທນຊັ້ນຍອດຂອງອຸປະນິໄສຂອງຊາຕານ. ເຫດຜົນທີ່ສິ່ງເຫຼົ່ານີ້ມີຢູ່ໃນຫົວໃຈຂອງຜູ້ຄົນ ທັງໝົດກໍຍ້ອນພິດຂອງຊາຕານກັດເຊາະຄວາມຄິດຂອງຜູ້ຄົນຢູ່ສະເໝີ ແລະ ຜູ້ຄົນກໍບໍ່ສາມາດກຳຈັດການລໍ້ລວງເຫຼົ່ານີ້ຂອງຊາຕານໄດ້ຕະຫຼອດເວລາ. ພວກເຂົາກຳລັງດຳລົງຊີວິດທ່າມກາງຄວາມບາບ ແຕ່ບໍ່ເຊື່ອວ່າ ມັນຄືຄວາມບາບ ແລະ ພວກເຂົາຍັງຄິດວ່າ: “ພວກຂ້ານ້ອຍເຊື່ອໃນພຣະເຈົ້າ, ສະນັ້ນ ພຣະອົງຕ້ອງປະທານພອນມາຍັງພວກຂ້ານ້ອຍ ແລະ ຈັດແຈງທຸກສິ່ງສຳລັບພວກຂ້ານ້ອຍຢ່າງເໝາະສົມ. ພວກຂ້ານ້ອຍເຊື່ອໃນພຣະເຈົ້າ, ສະນັ້ນພວກຂ້ານ້ອຍຕ້ອງດີກວ່າຄົນອື່ນ ແລະ ພວກຂ້ານ້ອຍຕ້ອງມີສະຖານະທີ່ສູງກວ່າ ແລະ ອະນາຄົດທີ່ດີກວ່າຄົນອື່ນໆ. ຍ້ອນພວກຂ້ານ້ອຍເຊື່ອໃນພຣະເຈົ້າ, ພຣະອົງຕ້ອງມອບພອນຢ່າງຫຼວງຫຼາຍໃຫ້ກັບພວກຂ້ານ້ອຍ. ບໍ່ດັ່ງນັ້ນ, ສິ່ງນັ້ນກໍບໍ່ຖືກເອີ້ນວ່າເປັນການເຊື່ອໃນພຣະເຈົ້າ”. ເປັນເວລາຫຼາຍປີ, ຄວາມຄິດທີ່ຜູ້ຄົນເພິ່ງພາສຳລັບການຢູ່ລອດຂອງພວກເຂົາໄດ້ກັດເຊາະຫົວໃຈຂອງພວກເຂົາຈົນເຖິງຈຸດທີ່ວ່າພວກເຂົາທໍລະຍົດ, ຂີ້ຢ້ານ ແລະ ຊົ່ວຊ້າ. ບໍ່ພຽງແຕ່ພວກເຂົາຂາດຄວາມຕັ້ງໃຈ ແລະ ຄວາມເດັດດ່ຽວເທົ່ານັ້ນ, ແຕ່ພວກເຂົາຍັງກາຍເປັນຄົນໂລບ, ອວດດີ ແລະ ດື້ດານອີກດ້ວຍ. ພວກເຂົາຂາດຄວາມຕັ້ງໃຈທີ່ຢູ່ເໜືອຕົນເອງຢ່າງສິ້ນເຊີງ ແລະ ຍິ່ງໄປກວ່ານັ້ນ ພວກເຂົາບໍ່ມີຄວາມກ້າຫານແມ່ນແຕ່ໜ້ອຍດຽວທີ່ຈະກຳຈັດການຄວບຄຸມຂອງອິດທິພົນດ້ານມືດເຫຼົ່ານີ້. ຄວາມຄິດ ແລະ ຊີວິດຂອງຜູ້ຄົນແມ່ນເນົ່າເປື່ອຍຫຼາຍຈົນທັດສະນະຂອງພວກເຂົາກ່ຽວກັບການເຊື່ອໃນພຣະເຈົ້າເປັນຕາລັງກຽດຢ່າງເຫຼືອທົນ ແລະ ແມ່ນແຕ່ເມື່ອພວກເຂົາເວົ້າກ່ຽວກັບທັດສະນະຂອງພວກເຂົາໃນ

ຄວາມເຊື່ອທີ່ມີຕໍ່ພຣະເຈົ້າ ກໍເປັນສິ່ງທີ່ທົນຟັງບໍ່ໄດ້ແທ້ໆ. ຜູ້ຄົນລ້ວນແລ້ວແຕ່ຂີ້ຢ້ານ, ບໍ່ມີຄວາມສາມາດ, ຊົ່ວຊ້າ ແລະ ອ່ອນແອຫຼາຍ. ພວກເຂົາບໍ່ຮູ້ສຶກກຽດຊັງອຳນາດມືດ ແລະ ພວກເຂົາບໍ່ຮູ້ສຶກຮັກແສງສະຫວ່າງ ແລະ ຄວາມຈິງ; ກົງກັນຂ້າມ ພວກເຂົາເຮັດສຸດຄວາມສາມາດຂອງພວກເຂົາເພື່ອຂັບໄລ່ສິ່ງເຫຼົ່ານັ້ນ. ຄວາມຄິດ ແລະ ທັດສະນະໃນປັດຈຸບັນຂອງພວກເຈົ້າບໍ່ແມ່ນແບບນີ້ບໍ? "ຍ້ອນຂ້ານ້ອຍເຊື່ອໃນພຣະເຈົ້າ ຂ້ານ້ອຍຄວນໄດ້ອາບດ້ວຍພອນຢ່າງຫຼວງຫຼາຍ ແລະ ຄວນໄດ້ຮັບປະກັນວ່າສະຖານະຂອງຂ້ານ້ອຍຈະບໍ່ສູນເສຍໄປຈັກເທື່ອ ແລະ ມັນຈະສູງສົ່ງກວ່າຄົນທີ່ບໍ່ເຊື່ອ". ເຈົ້າບໍ່ໄດ້ມີທັດສະນະແບບນັ້ນພາຍໃນພວກເຈົ້າພຽງແຕ່ໜຶ່ງ ຫຼື ສອງປີ, ແຕ່ເປັນເວລາຫຼາຍປີ. ແນວຄິດໃນການດຳເນີນງານຂອງພວກເຈົ້າພັດທະນາຫຼາຍເກີນໄປ. ເຖິງແມ່ນພວກເຈົ້າໄດ້ມາເຖິງຂັ້ນຕອນນີ້ໃນປັດຈຸບັນ, ພວກເຈົ້າກໍຍັງບໍ່ປະຖິ້ມສະຖານະ, ແຕ່ດີ້ນຣົນທີ່ຈະສອບຖາມກ່ຽວກັບມັນ ແລະ ສັງເກດມັນທຸກໆມື້ຢູ່ສະເໝີ ໂດຍມີຄວາມຢ້ານຢູ່ໃນສ່ວນເລິກວ່າ ມື້ໜຶ່ງ ສະຖານະຂອງພວກເຈົ້າຈະສູນເສຍໄປ ແລະ ຊື່ສຽງຂອງພວກເຈົ້າຈະຖືກທຳລາຍ. ຜູ້ຄົນບໍ່ເຄີຍປ່ອຍວາງຄວາມປາຖະໜາເພື່ອຄວາມສຸກສະບາຍຂອງພວກເຂົາ. ສະນັ້ນ ໃນຂະນະທີ່ ເຮົາພິພາກສາພວກເຈົ້າແບບນີ້ໃນປັດຈຸບັນ, ພວກເຈົ້າຈະມີຄວາມເຂົ້າໃຈໃນລະດັບໃດໃນທີ່ສຸດ? ພວກເຈົ້າຈະເວົ້າວ່າ ເຖິງແມ່ນ ສະຖານະຂອງພວກເຈົ້າຈະບໍ່ໄດ້ສູງ, ໃນທີ່ສຸດ ພວກເຈົ້າກໍຈະໄດ້ຮັບການຍົກຂຶ້ນຈາກພຣະເຈົ້າ. ພວກເຈົ້າບໍ່ມີສະຖານະເພາະພວກເຈົ້າເກີດມາຢ່າງຕໍ່າຕ້ອຍ, ແຕ່ພວກເຈົ້າໄດ້ຮັບສະຖານະກໍຍ້ອນການຍົກຂຶ້ນຂອງພຣະເຈົ້າ, ນີ້ແມ່ນສິ່ງທີ່ພຣະອົງປະທານໃຫ້ພວກເຈົ້າ. ໃນປັດຈຸບັນ ພວກເຈົ້າສາມາດຮັບເອົາການຝຶກຝົນຂອງພຣະອົງ, ການຂ້ຽນຕີຂອງພຣະອົງ ແລະ ການພິພາກສາຂອງພຣະອົງເປັນການສ່ວນຕົວ. ສິ່ງນີ້ຍິ່ງເປັນການຍົກຂຶ້ນຂອງພຣະອົງ. ພວກເຈົ້າສາມາດຮັບເອົາການຊຳລະລ້າງ ແລະ ການເຜົາໄໝ້ຂອງພຣະອົງເປັນການສ່ວນຕົວ. ນີ້ຄືຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າ. ຕະຫຼອດຍຸກຕ່າງໆ ຍັງບໍ່ມີແມ່ນແຕ່ຄົນດຽວທີ່ເຄີຍຮັບການຊຳລະລ້າງ ແລະ ການເຜົາໄໝ້ຂອງພຣະອົງ ແລະ ບໍ່ມີແມ່ນແຕ່ຄົນດຽວທີ່ເຄີຍສາມາດຖືກເຮັດໃຫ້ສົມບູນໂດຍພຣະທຳຂອງພຣະອົງ. ບັດນີ້ ພຣະເຈົ້າກຳລັງເວົ້າກັບພວກເຈົ້າຕໍ່ໜ້າ, ຊຳລະລ້າງພວກເຈົ້າ, ເປີດເຜີຍຄວາມກະບົດທີ່ຢູ່ພາຍໃນພວກເຈົ້າ, ນີ້ແມ່ນການຍົກຂຶ້ນຂອງພຣະອົງທີ່ແທ້ຈິງ. ຜູ້ຄົນມີຄວາມສາມາດຫຍັງແດ່? ສະຫຼຸບກໍຄື ບໍ່ວ່າພວກເຂົາເປັນລູກຊາຍຂອງເດວິດ ຫຼື ເຊື້ອສາຍຂອງໂມອາບ, ຜູ້ຄົນກໍເປັນສິ່ງຖືກສ້າງທີ່ບໍ່ມີຫຍັງຄູ່ຄວນໃຫ້ໂອ້ອວດເຖິງ. ຍ້ອນພວກເຈົ້າເປັນສິ່ງຖືກສ້າງຂອງພຣະເຈົ້າ, ພວກເຈົ້າຕ້ອງປະຕິບັດໜ້າທີ່ຂອງສິ່ງຖືກສ້າງ. ບໍ່ມີເງື່ອນໄຂອື່ນອີກສຳລັບພວກເຈົ້າ. ນີ້ຄືວິທີທີ່ພວກເຈົ້າຄວນອະທິຖານ: "ໂອ ພຣະເຈົ້າ! ບໍ່ວ່າຂ້ານ້ອຍມີສະຖານະ ຫຼື ບໍ່, ບັດນີ້ ຂ້ານ້ອຍກໍເຂົ້າໃຈຕົນເອງແລ້ວ. ຖ້າສະຖານະຂອງຂ້ານ້ອຍສູງສົ່ງ ມັນກໍຍ້ອນການຍົກຂຶ້ນຂອງພຣະອົງ ແລະ ຖ້າມັນຕໍ່າຕ້ອຍ ມັນກໍຍ້ອນການແຕ່ງຕັ້ງຂອງພຣະອົງ. ທຸກສິ່ງຢູ່ໃນມືຂອງພຣະອົງ. ຂ້ານ້ອຍບໍ່ມີທາງເລືອກ ຫຼື ການຕໍ່ວ່າໃດເລີຍ. ພຣະອົງກຳນົດວ່າ ຂ້ານ້ອຍຈະເກີດໃນປະເທດນີ້ ແລະ ທ່າມກາງຄົນເຫຼົ່ານີ້ ແລະ ສິ່ງດຽວທີ່ຂ້ານ້ອຍຄວນເຮັດກໍຄືເຊື່ອຟັງພາຍໃຕ້ອຳນາດຂອງພຣະອົງຢ່າງສົມບູນ ເພາະທຸກສິ່ງຢູ່ພາຍໃນສິ່ງທີ່ພຣະອົງໄດ້ກຳນົດໄວ້ແລ້ວ. ຂ້ານ້ອຍບໍ່ໄດ້ຄິດກັບສະຖານະ;

ໃນທີ່ສຸດແລ້ວ ຂ້ານ້ອຍກໍເປັນພຽງສິ່ງຖືກສ້າງ. ຖ້າພຣະອົງວາງຂ້ານ້ອຍໄວ້ໃນຂຸມເລິກທີ່ສຸດ, ໃນທະເລສາບແຫ່ງໄຟ ແລະ ມາດ, ຂ້ານ້ອຍກໍ່ເປັນພຽງແຕ່ສິ່ງຖືກສ້າງ. ຖ້າພຣະອົງໃຊ້ຂ້ານ້ອຍ, ຂ້ານ້ອຍກໍເປັນສິ່ງຖືກສ້າງ. ຖ້າພຣະອົງເຮັດໃຫ້ຂ້ານ້ອຍສົມບູນ, ຂ້ານ້ອຍກໍຍັງເປັນສິ່ງຖືກສ້າງ. ຖ້າພຣະອົງບໍ່ເຮັດໃຫ້ຂ້ານ້ອຍສົມບູນ, ຂ້ານ້ອຍກໍຍັງຈະຮັກພຣະອົງ ເພາະຂ້ານ້ອຍບໍ່ໄດ້ເປັນຫຼາຍໄປກວ່າສິ່ງຖືກສ້າງ. ຂ້ານ້ອຍບໍ່ໄດ້ເປັນຫຼາຍໄປກວ່າສິ່ງຖືກສ້າງເລັກນ້ອຍທີ່ຖືກເນລະມິດສ້າງຂຶ້ນໂດຍພຣະຜູ້ເປັນເຈົ້າແຫ່ງການຊົງສ້າງ, ເປັນພຽງຄົນໜຶ່ງທ່າມກາງມະນຸດທີ່ຖືກສ້າງທັງປວງ. ພຣະອົງເປັນຜູ້ສ້າງຂ້ານ້ອຍ ແລະ ບັດນີ້ ພຣະອົງໄດ້ວາງຂ້ານ້ອຍໄວ້ໃນມືຂອງພຣະອົງອີກຄັ້ງເພື່ອຈັດການກັບຂ້ານ້ອຍຕາມຄວາມປະສົງຂອງພຣະອົງ. ຂ້ານ້ອຍເຕັມໃຈທີ່ຈະເປັນເຄື່ອງມືຂອງພຣະອົງ ແລະ ຕົວປະກອບຂອງພຣະອົງ ເພາະທຸກສິ່ງແມ່ນສິ່ງທີ່ພຣະອົງໄດ້ກໍານົດໄວ້ແລ້ວ. ບໍ່ມີໃຜສາມາດປ່ຽນແປງມັນໄດ້. ທຸກສິ່ງ ແລະ ທຸກເຫດການແມ່ນຢູ່ໃນມືຂອງພຣະອົງ". ເມື່ອເວລານັ້ນມາເຖິງ, ເຈົ້າຈະບໍ່ຄິດກັບສະຖານະອີກຕໍ່ໄປ, ແລ້ວເຈົ້າກໍຈະຫຼຸດພົ້ນຈາກມັນ. ມີແຕ່ເມື່ອນັ້ນ ເຈົ້າຈຶ່ງສາມາດສະແຫວງຫາຢ່າງໝັ້ນໃຈ ແລະ ຢ່າງກ້າຫານ ແລະ ມີແຕ່ເມື່ອນັ້ນ ຫົວໃຈຂອງເຈົ້າຈຶ່ງສາມາດເປັນອິດສະຫຼະຈາກຂໍ້ຈໍາກັດຕ່າງໆ. ຫຼັງຈາກທີ່ຜູ້ຄົນຫຼຸດພົ້ນຈາກສິ່ງນັ້ນ, ພວກເຂົາກໍຈະບໍ່ສົນໃຈສິ່ງນັ້ນອີກຕໍ່ໄປ. ແມ່ນຫຍັງຄືຄວາມສົນໃຈສໍາລັບພວກເຈົ້າສ່ວນໃຫຍ່ໃນຕອນນີ້? ພວກເຈົ້າຖືກຈໍາກັດໂດຍສະຖານະຢູ່ສະເໝີ ແລະ ສົນໃຈຄວາມຄາດຫວັງຂອງພວກເຈົ້າເອງຢູ່ສະເໝີ. ພວກເຈົ້າເປີດໜ້າປຶ້ມແຫ່ງພຣະຄໍາຂອງພຣະເຈົ້າຢູ່ສະເໝີ, ປາຖະໜາທີ່ຈະອ່ານຖ້ອຍຄໍາກ່ຽວກັບຈຸດໝາຍປາຍທາງຂອງມະນຸດຊາດ ແລະ ຕ້ອງການຮູ້ວ່າແມ່ນຫຍັງຄືຄວາມຄາດຫວັງຂອງພວກເຈົ້າ ແລະ ຈຸດໝາຍປາຍທາງຂອງພວກເຈົ້າຈະເປັນແນວໃດ. ພວກເຈົ້າຄິດສົງໄສວ່າ: "ຂ້ານ້ອຍມີຄວາມຄາດຫວັງແທ້ບໍ? ພຣະເຈົ້າໄດ້ລຶບລ້າງຄວາມຄາດຫວັງເຫຼົ່ານັ້ນອອກແລ້ວບໍ? ພຣະເຈົ້າພຽງກ່າວວ່າຂ້ານ້ອຍເປັນຕົວປະກອບ; ແລ້ວແມ່ນຫຍັງຄືຄວາມຄາດຫວັງຂອງຂ້ານ້ອຍ?" ມັນຍາກສໍາລັບພວກເຈົ້າທີ່ຈະປ່ອຍວາງຄວາມຄາດຫວັງ ແລະ ໂຊກຊະຕາຂອງພວກເຈົ້າ. ບັດນີ້ ພວກເຈົ້າເປັນຜູ້ຕິດຕາມ ແລະ ພວກເຈົ້າມີຄວາມເຂົ້າໃຈບາງຢ່າງກ່ຽວກັບພາລະກິດຂັ້ນຕອນນີ້. ເຖິງຢ່າງໃດກໍຕາມ, ພວກເຈົ້າກໍຍັງບໍ່ໄດ້ປະຖິ້ມຄວາມປາຖະໜາສໍາລັບສະຖານະຂອງພວກເຈົ້າ. ເມື່ອສະຖານະຂອງພວກເຈົ້າສູງ ພວກເຈົ້າກໍສະແຫວງຫາເປັນຢ່າງດີ, ແຕ່ເມື່ອສະຖານະຂອງພວກເຈົ້າຕໍ່າ ພວກເຈົ້າກໍບໍ່ສະແຫວງຫາອີກຕໍ່ໄປ. ການໃຫ້ພອນທາງດ້ານສະຖານະແມ່ນຢູ່ໃນຄວາມຄິດຂອງພວກເຈົ້າສະເໝີ. ເປັນຫຍັງຜູ້ຄົນສ່ວນໃຫຍ່ຈຶ່ງບໍ່ສາມາດເຮັດໃຫ້ຕົນເອງໜີອອກຈາກຄວາມຄິດດ້ານລົບນີ້ໄດ້? ຄໍາຕອບທີ່ປະຕິເສດບໍ່ໄດ້ກໍຄື ມັນບໍ່ແມ່ນຍ້ອນຄວາມຄາດຫວັງທີ່ວ່າງເປົ່າບໍ? ທັນທີທີ່ຖ້ອຍຄໍາຂອງພຣະເຈົ້າຖືກກ່າວອອກມາ ພວກເຈົ້າກໍຮີບໄປເບິ່ງວ່າສະຖານະ ແລະ ຕົວຕົນຂອງພວກເຈົ້າແມ່ນຫຍັງແທ້. ພວກເຈົ້າວາງສະຖານະ ແລະ ຕົວຕົນເປັນສິ່ງສໍາຄັນທໍາອິດ ແລະ ນິມິດເປັນສິ່ງທີສອງ. ສິ່ງທີສາມແມ່ນສິ່ງທີ່ພວກເຈົ້າຄວນເຂົ້າສູ່ ແລະ ສິ່ງທີສີ່ແມ່ນຄວາມປະສົງໃນປັດຈຸບັນຂອງພຣະເຈົ້າ. ກ່ອນອື່ນ ພວກເຈົ້າເບິ່ງວ່າ ຕໍາແໜ່ງຂອງ "ຕົວປະກອບ" ທີ່ພຣະເຈົ້າໃຫ້ກັບພວກເຈົ້ານັ້ນໄດ້ປ່ຽນແປງ ຫຼື ບໍ່. ພວກເຈົ້າອ່ານ ແລະ ອ່ານ ແລະ ເມື່ອພວກເຈົ້າເຫັນ

ວ່າຕຳແໜ່ງຂອງ "ຕົວປະກອບ" ໄດ້ຖືກລົບລ້າງ ພວກເຈົ້າກໍດີໃຈ ແລະ ຂອບຄຸນພຣະເຈົ້າຢ່າງຕໍ່ເນື່ອງ ແລະ ສັນລະເສີນອຳນາດອັນຍິ່ງໃຫຍ່ຂອງພຣະອົງ. ແຕ່ຖ້າພວກເຈົ້າເຫັນວ່າພວກເຈົ້າຍັງເປັນຕົວປະກອບ, ພວກເຈົ້າກໍເສຍໃຈ ແລະ ແຮງຜັກດັນໃນຫົວໃຈຂອງພວກເຈົ້າກໍຫາຍໄປທັນທີ. ຍິ່ງເຈົ້າສະແຫວງຫາໃນລັກສະນະນີ້ຫຼາຍສໍ່າໃດ ເຈົ້າກໍຍິ່ງຈະເກັບກ່ຽວໄດ້ໜ້ອຍສໍ່ານັ້ນ. ຍິ່ງຄວາມປາຖະໜາສຳລັບສະຖານະຂອງຜູ້ຄົນຍິ່ງໃຫຍ່ຫຼາຍສໍ່າໃດ ພວກເຂົາກໍຍິ່ງຈະຕ້ອງຖືກຈັດການຢ່າງຈິງຈັງຫຼາຍສໍ່ານັ້ນ ແລະ ພວກເຂົາກໍຍິ່ງຈະຕ້ອງຜະເຊີນກັບການຫຼູ່ຫຼອມຫຼາຍສໍ່ານັ້ນ. ຄົນປະເພດນັ້ນໄຮ້ຄ່າຫຼາຍ! ພວກເຂົາຕ້ອງຖືກຈັດການ ແລະ ຖືກພິພາກສາຢ່າງພຽງພໍ ເພື່ອພວກເຂົາຈະປະຖິ້ມສິ່ງເຫຼົ່ານີ້ໂດຍສິ້ນເຊີງ. ຖ້າພວກເຈົ້າສະແຫວງຫາໃນລັກສະນະນີ້ຈົນເຖິງເວລາສຸດທ້າຍ, ພວກເຈົ້າກໍຈະບໍ່ໄດ້ເກັບກ່ຽວຫຍັງເລີຍ. ຄົນທີ່ບໍ່ສະແຫວງຫາຊີວິດແມ່ນບໍ່ສາມາດຖືກປ່ຽນແປງໄດ້ ແລະ ຄົນທີ່ບໍ່ກະຫາຍຫາຄວາມຈິງແມ່ນບໍ່ສາມາດໄດ້ຮັບຄວາມຈິງ. ເຈົ້າບໍ່ໃສ່ໃຈໃນການສະແຫວງຫາການປ່ຽນແປງສ່ວນຕົວ ແລະ ການເຂົ້າສູ່, ແຕ່ກົງກັນຂ້າມໃສ່ໃຈໃນຄວາມປາຖະໜາທີ່ເກີນຂອບເຂດ ແລະ ສິ່ງຕ່າງໆທີ່ຈຳກັດຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້າ ແລະ ກີດກັ້ນເຈົ້າບໍ່ໃຫ້ຫຍັບເຂົ້າໃກ້ພຣະອົງ. ສິ່ງເຫຼົ່ານັ້ນສາມາດປ່ຽນແປງເຈົ້າໄດ້ບໍ? ສິ່ງເຫຼົ່ານັ້ນສາມາດນຳເຈົ້າເຂົ້າສູ່ອານາຈັກໄດ້ບໍ? ຖ້າເປົ້າໝາຍຂອງການສະແຫວງຫາຂອງເຈົ້າບໍ່ແມ່ນເພື່ອສະແຫວງຫາຄວາມຈິງ, ແລ້ວເຈົ້າກໍຄວນສວຍໃຊ້ໂອກາດນີ້ ແລະ ກັບຄືນສູ່ໂລກໃຫ້ຈົບສິ້ນໄປ. ການເສຍເວລາຂອງເຈົ້າແບບນີ້ບໍ່ຄຸ້ມຄ່າເລີຍແທ້ໆ, ເປັນຫຍັງຕ້ອງທໍລະມານຕົນເອງ? ມັນບໍ່ແມ່ນຄວາມຈິງບໍ່ທີ່ເຈົ້າສາມາດເພີດເພີນກັບທຸກສິ່ງຈາກໂລກທີ່ສວຍງາມນັ້ນ? ເງິນທອງ, ແມ່ຍິງທີ່ສວຍງາມ, ສະຖານະ, ຄວາມທະນົງຕົວ, ຄອບຄົວ, ລູກຫຼານ ແລະ ອື່ນໆອີກ, ຜົນຜະລິດເຫຼົ່ານີ້ຂອງໂລກບໍ່ແມ່ນສິ່ງທີ່ດີທີ່ສຸດທີ່ເຈົ້າສາມາດໄດ້ຮັບບໍ? ມັນຈະມີປະໂຫຍດຫຍັງທີ່ຕ້ອງພະເນຈອນໄປມາໃນນີ້ເພື່ອຊອກຫາສະຖານທີ່ໆເຈົ້າສາມາດມີຄວາມສຸກໄດ້? ຂະໜາດບຸດມະນຸດຍັງບໍ່ມີບ່ອນໃຫ້ວາງຫົວຂອງພຣະອົງລົງ, ແລ້ວເຈົ້າຈະສາມາດມີພື້ນທີ່ເພື່ອຄວາມສະບາຍໃຈໄດ້ແນວໃດ? ພຣະອົງຈະສ້າງສະຖານທີ່ສວຍງາມເພື່ອຄວາມສຸກສະບາຍໃຫ້ກັບເຈົ້າໄດ້ແນວໃດ? ນັ້ນເປັນໄປໄດ້ບໍ? ນອກຈາກການພິພາກສາຂອງເຮົາ, ມື້ນີ້ ເຈົ້າພຽງແຕ່ຮັບຄຳສັ່ງສອນກ່ຽວກັບຄວາມຈິງ. ເຈົ້າບໍ່ສາມາດຮັບຄວາມສຸກສະບາຍຈາກເຮົາ ແລະ ເຈົ້າບໍ່ສາມາດໄດ້ຮັບຕຽງນອນແຫ່ງດອກກຸຫຼາບທີ່ເຈົ້າສະແຫວງຫາທັງເວັນ ແລະ ຄືນ. ເຮົາຈະບໍ່ປະທານຄວາມຮັ່ງມີຂອງແຜ່ນດິນໂລກໃຫ້ກັບເຈົ້າ. ຖ້າເຈົ້າສະແຫວງຫາຢ່າງແທ້ຈິງ, ແລ້ວ ເຮົາກໍເຕັມໃຈທີ່ຈະມອບຫົນທາງແຫ່ງຊີວິດທັງໝົດໃຫ້ກັບເຈົ້າ, ເຮັດໃຫ້ເຈົ້າເປັນຄືກັບປາທີ່ກັບຄືນສູ່ແມ່ນໍ້າ. ຖ້າເຈົ້າບໍ່ສະແຫວງຫາຢ່າງແທ້ຈິງ, ເຮົາກໍຈະເອົາທຸກສິ່ງຄືນ. ເຮົາບໍ່ເຕັມໃຈທີ່ຈະມອບພຣະທຳຈາກປາກຂອງເຮົາໃຫ້ກັບຄົນເຫຼົ່ານັ້ນທີ່ໂລບມາກໂລພາເພື່ອຄວາມສຸກສະບາຍ, ຜູ້ທີ່ເປັນຄືກັບໝູ ແລະ ໝາ!

# ວິທີທີ່ຜົນຂອງບາດກ້າວທີສອງຂອງ ພາລະກິດແຫ່ງການເອົາຊະນະຖືກບັນລຸ

ພາລະກິດຂອງຜູ້ໃຫ້ບໍລິການແມ່ນບາດກ້າວທຳອິດໃນພາລະກິດແຫ່ງການເອົາຊະນະ. ປັດຈຸບັນແມ່ນບາດກ້າວທີສອງໃນພາລະກິດແຫ່ງການເອົາຊະນະ. ເປັນຫຍັງຈຶ່ງຍັງເວົ້າເຖິງການຖືກເຮັດໃຫ້ສົມບູນໃນພາລະກິດແຫ່ງການເອົາຊະນະ? ມັນແມ່ນເພື່ອສ້າງພື້ນຖານສຳລັບອະນາຄົດ. ປັດຈຸບັນແມ່ນຂັ້ນຕອນສຸດທ້າຍຂອງພາລະກິດແຫ່ງການເອົາຊະນະ; ເປັນເວລາແຫ່ງການຜະເຊີນກັບຄວາມລຳບາກຍາກແຄ້ນອັນຍິ່ງໃຫຍ່ ເຊິ່ງຈະສະແດງເຖິງຈຸດເລີ່ມຕົ້ນຢ່າງເປັນທາງການຂອງການເຮັດໃຫ້ມະນຸດຊາດສົມບູນ, ທີ່ຈະຕາມມາ. ປະເດັນຫຼັກໃນຕອນນີ້ແມ່ນການເອົາຊະນະ, ແຕ່ຕອນນີ້ຍັງເປັນເວລາຂອງບາດກ້າວທຳອິດໃນຂະບວນການເຮັດໃຫ້ສົມບູນ. ສິ່ງທີ່ບາດກ້າວທຳອິດນີ້ຈຳເປັນຕ້ອງເຮັດກໍຄືການເຮັດໃຫ້ຄວາມຮູ້ ແລະ ຄວາມເຊື່ອຟັງຂອງຜູ້ຄົນສົມບູນ ເຊິ່ງແນ່ນອນນີ້ຄືການສ້າງພື້ນຖານໃຫ້ແກ່ພາລະກິດແຫ່ງການເອົາຊະນະ. ຖ້າເຈົ້າຈະຖືກເຮັດໃຫ້ສົມບູນ, ແລ້ວເຈົ້າກໍຕ້ອງສາມາດທີ່ຈະຍຶດໝັ້ນໃນທ່າມກາງຄວາມລຳບາກຍາກແຄ້ນຂອງອະນາຄົດ ແລະ ມອບທຸກຢ່າງຂອງເຈົ້າເພື່ອຂະຫຍາຍບາດກ້າວຕໍ່ໄປຂອງພາລະກິດ; ນີ້ຄືຄວາມໝາຍຂອງການຖືກເຮັດໃຫ້ສົມບູນ ແລະ ເວລາດັ່ງກ່າວກໍຍັງເປັນເວລາທີ່ຜູ້ຄົນຖືກຮັບໂດຍພຣະເຈົ້າຢ່າງສິ້ນເຊີງ. ມື້ນີ້ ພວກເຮົາກຳລັງສົນທະນາກ່ຽວກັບການຖືກເອົາຊະນະ ເຊິ່ງກໍຄືກັນກັບການສົນທະນາກ່ຽວກັບການຖືກເຮັດໃຫ້ສົມບູນ. ແຕ່ພາລະກິດທີ່ປະຕິບັດໃນມື້ນີ້ແມ່ນພື້ນຖານສຳລັບການຖືກເຮັດໃຫ້ສົມບູນໃນອະນາຄົດ; ເພື່ອທີ່ຈະຖືກເຮັດໃຫ້ສົມບູນ, ຜູ້ຄົນຕ້ອງຜະເຊີນກັບຄວາມຍາກລຳບາກ ແລະ ປະສົບການແຫ່ງຄວາມຍາກລຳບາກນີ້ຕ້ອງມີພື້ນຖານໃນການຖືກເອົາຊະນະ. ຖ້າຜູ້ຄົນປາສະຈາກພື້ນຖານໃນປັດຈຸບັນ, ຖ້າພວກເຂົາບໍ່ໄດ້ຖືກເອົາຊະນະຢ່າງສິ້ນເຊີງ, ແລ້ວມັນກໍຈະຍາກສຳລັບພວກເຂົາທີ່ຈະຍຶດໝັ້ນໃນລະຫວ່າງບາດກ້າວຕໍ່ໄປຂອງພາລະກິດ. ການຖືກເອົາຊະນະພຽງຢ່າງດຽວບໍ່ແມ່ນເປົ້າໝາຍສຸດທ້າຍ. ມັນເປັນພຽງບາດກ້າວໜຶ່ງຂອງການເປັນພະຍານໃຫ້ແກ່ພຣະເຈົ້າຢູ່ຕໍ່ໜ້າຊາຕານ. ການຖືກເຮັດໃຫ້ສົມບູນແມ່ນເປົ້າໝາຍສຸດທ້າຍ ແລະ ຖ້າເຈົ້າບໍ່ຖືກເຮັດໃຫ້ສົມບູນ, ແລ້ວເຈົ້າກໍຄວນຖືກຕັດອອກຈະດີກວ່າ. ມີພຽງແຕ່ເມື່ອໄດ້ປະສົບກັບຄວາມລຳບາກຍາກແຄ້ນໃນອະນາຄົດເທົ່ານັ້ນ ວຸດທິພາວະທີ່ແທ້ຈິງຂອງເຈົ້າຈຶ່ງຈະເປັນທີ່ປະຈັກ; ນັ້ນໝາຍຄວາມວ່າ ມີພຽງແຕ່ເມື່ອນັ້ນ ລະດັບຄວາມບໍລິສຸດຂອງຄວາມຮັກຂອງເຈົ້າສຳລັບພຣະເຈົ້າຈຶ່ງຈະຊັດເຈນ. ສິ່ງທີ່ຜູ້ຄົນເວົ້າໃນມື້ນີ້ກໍຄື: "ພວກຂ້ານ້ອຍຕ້ອງເຊື່ອຟັງພຣະເຈົ້າ ບໍ່ວ່າພຣະອົງເຮັດຫຍັງກໍຕາມ. ພວກຂ້ານ້ອຍເຕັມໃຈທີ່ຈະເປັນຕົວປະກອບທີ່ສາມາດສະແດງລິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ ແລະ ອຸປະນິໄສຂອງພຣະເຈົ້າ. ບໍ່ວ່າພຣະເຈົ້າຈະໃຈດີຕໍ່ພວກຂ້ານ້ອຍ ຫຼື ສາບແຊ່ງພວກຂ້ານ້ອຍ ຫຼື ບໍ່ວ່າພຣະອົງຈະພິພາກສາພວກຂ້ານ້ອຍ ຫຼື ບໍ່, ພວກຂ້ານ້ອຍກໍຈະຍັງຂອບຄຸນພຣະເຈົ້າ". ແທ້ຈິງແລ້ວ ເຈົ້າເວົ້າແບບນີ້ແມ່ນສະແດງໃຫ້ເຫັນພຽງແຕ່ວ່າເຈົ້າມີຄວາມຮູ້ເລັກນ້ອຍບາງຢ່າງເທົ່ານັ້ນ, ແຕ່ບໍ່ວ່າຄວາມຮູ້ດັ່ງກ່າວຈະສາມາດຖືກໃຊ້ເຂົ້າໃນຄວາມເປັນຈິງ ຫຼື ບໍ່ ແມ່ນຂຶ້ນກັບວ່າ

ຄວາມຮູ້ນີ້ເປັນຈິງ ຫຼື ບໍ່. ການທີ່ຜູ້ຄົນມີຄວາມເຂົ້າໃຈ ແລະ ຄວາມຮູ້ດັ່ງກ່າວໃນມື້ນີ້ແມ່ນຜົນຂອງພາລະກິດແຫ່ງການເອົາຊະນະ. ບໍ່ວ່າເຈົ້າຈະສາມາດຖືກເຮັດໃຫ້ສົມບູນ ຫຼື ບໍ່ແມ່ນສາມາດເຫັນໄດ້ເມື່ອມີການຜະເຊີນກັບຄວາມລຳບາກຍາກແຄ້ນເທົ່ານັ້ນ ແລະ ໃນເວລານັ້ນ ມັນຈະເປັນທີ່ປະຈັກວ່າເຈົ້າຮັກພຣະເຈົ້າຢ່າງແທ້ຈິງຈາກຫົວໃຈຂອງເຈົ້າ ຫຼື ບໍ່. ຖ້າຄວາມຮັກຂອງເຈົ້າບໍລິສຸດແທ້ຈິງ, ແລ້ວເຈົ້າກໍຈະເວົ້າວ່າ: "ພວກຂ້ານ້ອຍເປັນຕົວປະກອບ, ພວກຂ້ານ້ອຍເປັນສິ່ງຖືກສ້າງໃນມືຂອງພຣະເຈົ້າ". ເມື່ອເຈົ້າເຜີຍແຜ່ຂ່າວປະເສີດຕໍ່ຊາວຕ່າງຊາດ, ເຈົ້າຈະເວົ້າວ່າ "ຂ້ານ້ອຍພຽງແຕ່ເຮັດບໍລິການ. ການໃຊ້ອຸປະນິໄສອັນເສື່ອມຊາມທີ່ຢູ່ພາຍໃນພວກຂ້ານ້ອຍ, ພຣະເຈົ້າໄດ້ເວົ້າທຸກສິ່ງເຫຼົ່ານີ້ເພື່ອສະແດງອຸປະນິໄສອັນຊອບທຳຂອງພຣະອົງແກ່ພວກເຮົາ; ຖ້າພຣະອົງບໍ່ໄດ້ກ່າວສິ່ງດັ່ງກ່າວ, ພວກເຮົາກໍຈະບໍ່ສາມາດເຫັນພຣະເຈົ້າໄດ້ ຫຼື ເຂົ້າໃຈສະຕິປັນຍາຂອງພຣະອົງ ຫຼື ຮັບຄວາມລອດພົ້ນອັນຍິ່ງໃຫຍ່ດັ່ງກ່າວ ແລະ ພອນອັນຍິ່ງໃຫຍ່ດັ່ງກ່າວ". ຖ້າເຈົ້າມີຄວາມຮູ້ຈາກປະສົບການນີ້ຢ່າງແທ້ຈິງ, ແລ້ວມັນກໍຈະພຽງພໍ. ແຕ່ຫຼາຍສິ່ງທີ່ເຈົ້າເວົ້າໃນມື້ນີ້ແມ່ນຂາດຄວາມຮູ້ ແລະ ທຸກສິ່ງແມ່ນເປັນພຽງແຕ່ຄຳຂວັນທີ່ວ່າງເປົ່າເທົ່ານັ້ນ: "ພວກຂ້ານ້ອຍເປັນຕົວປະກອບ ແລະ ຜູ້ໃຫ້ບໍລິການ; ພວກຂ້ານ້ອຍປາຖະໜາທີ່ຈະຖືກເອົາຊະນະ ແລະ ເປັນພະຍານອັນກຶກກ້ອງໃຫ້ແກ່ພຣະເຈົ້າ...". ພຽງແຕ່ຮ້ອງຂຶ້ນຢ່າງດຽວບໍ່ໄດ້ໝາຍຄວາມວ່າເຈົ້າມີຄວາມເປັນຈິງ ຫຼື ມັນບໍ່ໄດ້ພິສູດວ່າເຈົ້າມີວຸດທິພາວະ; ເຈົ້າຕ້ອງມີຄວາມຮູ້ຢ່າງແທ້ຈິງ ແລະ ຄວາມຮູ້ຂອງເຈົ້າຕ້ອງຖືກທົດສອບ.

ເຈົ້າຄວນອ່ານເພີ່ມເຕີມກ່ຽວກັບພຣະຄຳເຫຼົ່ານີ້ທີ່ພຣະເຈົ້າໄດ້ກ່າວໃນລະຫວ່າງຊ່ວງເວລານີ້ ແລະເບິ່ງການກະທຳຂອງເຈົ້າເພື່ອການປຽບທຽບ: ມັນເປັນຄວາມຈິງແທ້ທີ່ເຈົ້າສະບາຍດີ ແລະ ເປັນຕົວປະກອບຢ່າງແທ້ຈິງ! ແມ່ນຫຍັງຄືຂອບເຂດຂອງຄວາມຮູ້ຂອງເຈົ້າໃນມື້ນີ້? ແນວຄິດຂອງເຈົ້າ, ຄວາມຄິດຂອງເຈົ້າ, ພຶດຕິກຳຂອງເຈົ້າ, ຄຳເວົ້າ ແລະ ການກະທຳຂອງເຈົ້າ, ທຸກການສະແດງອອກເຫຼົ່ານີ້ບໍ່ເທົ່າກັບການເປັນຕົວປະກອບໃນຄວາມຊອບທຳ ແລະ ຄວາມບໍລິສຸດຂອງພຣະເຈົ້າບໍ? ການເວົ້າຂອງພວກເຈົ້າບໍ່ແມ່ນການສະແດງອອກເຖິງອຸປະນິໄສອັນເສື່ອມຊາມທີ່ຖືກເປີດເຜີຍໂດຍພຣະທຳຂອງພຣະເຈົ້າບໍ? ຄວາມຄິດ ແລະ ແນວຄິດຂອງເຈົ້າ, ແຮງຈູງໃຈຂອງເຈົ້າ ແລະ ຄວາມເສື່ອມຊາມທີ່ຖືກເປີດເຜີຍໃນຕົວເຈົ້າສະແດງເຖິງອຸປະນິໄສອັນຊອບທຳຂອງພຣະເຈົ້າ ພ້ອມທັງເປັນຄວາມບໍລິສຸດຂອງພຣະອົງ. ພຣະເຈົ້າກໍເກີດໃນດິນແດນທີ່ສົກກະປົກເຊັ່ນກັນ ແຕ່ພຣະອົງຍັງບໍ່ໄດ້ເປິເປື້ອນໄປດ້ວຍຄວາມສົກກະປົກ. ພຣະອົງດຳລົງຊີວິດໃນໂລກທີ່ສົກກະປົກແບບດຽວກັບເຈົ້າ, ແຕ່ພຣະອົງມີເຫດຜົນ, ມີຄວາມເຂົ້າໃຈ ແລະ ພຣະອົງກຽດຊັງຄວາມສົກກະປົກ. ເຈົ້າເຖິງກັບອາດຈະບໍ່ສາມາດຄົ້ນພົບສິ່ງທີ່ສົກກະປົກໃນຄຳເວົ້າ ແລະ ການກະທຳຂອງເຈົ້າ, ແຕ່ພຣະອົງສາມາດເຮັດໄດ້ ແລະ ພຣະອົງຊີ້ແຈງສິ່ງເຫຼົ່ານີ້ໃຫ້ກັບເຈົ້າ. ສິ່ງເດີມໆເຫຼົ່ານັ້ນຂອງເຈົ້າ, ການຂາດການປູກຝັງ, ຄວາມເຂົ້າໃຈ ແລະ ຄວາມຮູ້ສຶກຂອງເຈົ້າ ແລະ ວິທີການດຳລົງຊີວິດທີ່ຫຼ້າຫຼັງຂອງເຈົ້າ, ບັດນີ້ ສິ່ງເຫຼົ່ານີ້ຖືກເຮັດໃຫ້ປາກົດອອກສູ່ສາທາລະນະໂດຍການເປີດເຜີຍໃນປັດຈຸບັນ; ໂດຍການທີ່ພຣະເຈົ້າມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດແບບນີ້ເທົ່ານັ້ນ ຜູ້ຄົນຈຶ່ງຈະເຫັນເຖິງຄວາມບໍລິສຸດ ແລະ ອຸປະນິໄສ

ອັນຊອບທຳຂອງພຣະອົງ. ພຣະອົງພິພາກສາ ແລະ ຂ້ຽນຕີເຈົ້າ, ເຮັດໃຫ້ເຈົ້າໄດ້ຮັບຄວາມເຂົ້າໃຈ; ບາງເທື່ອ ທຳມະຊາດແບບມານຮ້າຍຂອງເຈົ້າກໍສຳແດງອອກມາ ແລະ ພຣະອົງຊີ້ໃຫ້ເຈົ້າເຫັນສິ່ງນັ້ນ. ພຣະອົງຮູ້ຈັກທາດແທ້ຂອງມະນຸດຄືກັບຫຼັງມືຂອງພຣະອົງ. ພຣະອົງດຳລົງຊີວິດທ່າມກາງພວກເຈົ້າ, ພຣະອົງກິນອາຫານແບບດຽວກັບເຈົ້າ ແລະ ພຣະອົງດຳລົງຊີວິດໃນສະພາບແວດລ້ອມດຽວກັນ, ແຕ່ເຖິງຢ່າງນັ້ນກໍຕາມ ພຣະອົງຮູ້ຫຼາຍກວ່າ; ພຣະອົງສາມາດເປີດໂປງເຈົ້າ ແລະ ເບິ່ງເຫັນທາດແທ້ທີ່ເສື່ອມຊາມຂອງມະນຸດຊາດ. ບໍ່ມີຫຍັງທີ່ພຣະອົງກຽດຊັງໄປຫຼາຍກວ່າປັດຊະຍາໃນການດຳລົງຊີວິດຂອງມະນຸດ ແລະ ຄວາມບໍ່ຊື່ສັດ ແລະ ຄວາມກະບົດ. ໂດຍສະເພາະແລ້ວ ພຣະອົງກຽດຊັງປະຕິກິລິຍາທາງເນື້ອໜັງຂອງຜູ້ຄົນ. ພຣະອົງອາດບໍ່ຄຸ້ນເຄີຍກັບປັດຊະຍາໃນການດຳລົງຊີວິດຂອງມະນຸດ, ແຕ່ພຣະອົງສາມາດເຫັນໄດ້ຢ່າງຊັດເຈນ ແລະ ເປີດໂປງອຸປະນິໄສອັນເສື່ອມຊາມທີ່ຜູ້ຄົນເປີດເຜີຍອອກ. ພຣະອົງປະຕິບັດພາລະກິດເພື່ອກ່າວ ແລະ ສອນມະນຸດຜ່ານສິ່ງເຫຼົ່ານີ້, ພຣະອົງໃຊ້ສິ່ງເຫຼົ່ານີ້ເພື່ອພິພາກສາຜູ້ຄົນ ແລະ ເພື່ອເຮັດໃຫ້ອຸປະນິໄສອັນຊອບທຳ ແລະ ບໍລິສຸດຂອງພຣະອົງເອງເປັນທີ່ປະຈັກ. ດ້ວຍເຫດນັ້ນ ຜູ້ຄົນຈຶ່ງກາຍມາເປັນຕົວປະກອບໃນພາລະກິດຂອງພຣະອົງ. ມີພຽງແຕ່ພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນທີ່ສາມາດເຮັດໃຫ້ອຸປະນິໄສອັນເສື່ອມຊາມຂອງມະນຸດ ແລະ ໃບໜ້າອັນຂີ້ຮ້າຍທັງໝົດຂອງຊາຕານປາກົດອອກຢ່າງແຈ່ມແຈ້ງ. ເຖິງແມ່ນພຣະອົງບໍ່ລົງໂທດເຈົ້າ ແລະ ພຽງແຕ່ໃຊ້ເຈົ້າໃຫ້ເປັນຕົວປະກອບໃນຄວາມຊອບທຳ ແລະ ຄວາມບໍລິສຸດຂອງພຣະອົງ, ເຈົ້າກໍຮູ້ສຶກອັບອາຍ ແລະ ບໍ່ມີບ່ອນໃຫ້ປົກປິດຕົນເອງ ຍ້ອນເຈົ້າສົກກະປົກເກີນໄປ. ພຣະອົງກ່າວສິ່ງເຫຼົ່ານີ້ທີ່ຖືກເປີດໂປງໃນມະນຸດເທົ່ານັ້ນ ແລະ ມີແຕ່ເມື່ອສິ່ງເຫຼົ່ານີ້ຖືກເຮັດໃຫ້ປາກົດອອກສູ່ສາທາລະນະເທົ່ານັ້ນ ຜູ້ຄົນຈຶ່ງຈະຮູ້ຈັກວ່າພຣະເຈົ້າບໍລິສຸດສໍ່າໃດ. ພຣະອົງບໍ່ເບິ່ງຂ້າມຄວາມບໍ່ບໍລິສຸດແມ່ນແຕ່ເລັກນ້ອຍໃນຜູ້ຄົນ, ບໍ່ແມ່ນແຕ່ຄວາມຄິດອັນສົກກະປົກທີ່ຢູ່ໃນຫົວໃຈຂອງພວກເຂົາ; ຖ້າຄຳເວົ້າ ແລະ ການກະທຳຂອງຜູ້ຄົນບໍ່ສອດຄ່ອງກັບຄວາມປະສົງຂອງພຣະອົງ, ແລ້ວພຣະອົງກໍບໍ່ຍົກໂທດໃຫ້ພວກເຂົາ. ໃນພຣະທຳຂອງພຣະອົງ, ບໍ່ມີຫ້ອງສຳລັບຄວາມສົກກະປົກຂອງມະນຸດ ຫຼື ສິ່ງອື່ນໆ, ມັນຕ້ອງຖືກເຮັດໃຫ້ປາກົດສູ່ສາທາລະນະທັງໝົດ. ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະເຫັນວ່າພຣະອົງບໍ່ຄືກັບມະນຸດແທ້ໆ. ຖ້າມີຄວາມສົກກະປົກແມ່ນແຕ່ໜ້ອຍດຽວໃນຜູ້ຄົນ, ແລ້ວພຣະອົງກໍກຽດຊັງພວກເຂົາຢ່າງທີ່ສຸດ. ເຖິງກັບມີບາງເວລາທີ່ພວກເຂົາບໍ່ສາມາດເຂົ້າໃຈ ແລະ ເວົ້າວ່າ "ພຣະເຈົ້າເອີຍ ເປັນຫຍັງພຣະອົງຈຶ່ງໃຈຮ້າຍຫຼາຍແທ້? ເປັນຫຍັງພຣະອົງຈຶ່ງບໍ່ສົນໃຈຕໍ່ຄວາມອ່ອນແອຂອງມະນຸດ? ເປັນຫຍັງພຣະອົງຈຶ່ງບໍ່ສາມາດໃຫ້ອະໄພຜູ້ຄົນແດ່ເລັກນ້ອຍ? ເປັນຫຍັງພຣະອົງຈຶ່ງບໍ່ຄຳນຶງເຖິງມະນຸດຂະໜາດນັ້ນ? ພຣະອົງຮູ້ຈັກຢ່າງຊັດເຈນວ່າຜູ້ຄົນຖືກເສື່ອມຊາມໃນລະດັບໃດ, ແລ້ວເປັນຫຍັງພຣະອົງຈຶ່ງຍັງປະຕິບັດຕໍ່ພວກເຂົາແບບນີ້?" ພຣະອົງກຽດຊັງຄວາມຜິດບາບ, ພຣະອົງເບື່ອໜ່າຍມັນ ແລະ ໂດຍສະເພາະແລ້ວ ພຣະອົງເບື່ອໜ່າຍຖ້າມີຮ່ອງຮອຍຂອງຄວາມບໍ່ເຊື່ອຟັງໃນຕົວເຈົ້າ. ເມື່ອເຈົ້າເປີດເຜີຍອຸປະນິໄສທີ່ກະບົດ, ພຣະອົງກໍເຫັນມັນ ແລະ ເບື່ອໜ່າຍຢ່າງແຮງ, ເບື່ອໜ່າຍຫຼາຍແທ້ໆ. ຜ່ານສິ່ງເຫຼົ່ານີ້ທີ່ອຸປະນິໄສ ແລະ ສິ່ງທີ່ພຣະເຈົ້າເປັນໄດ້ຖືກສະແດງອອກ. ເມື່ອເຈົ້າຍົກຕົວເຈົ້າເອງຂຶ້ນມາປຽບທຽບ, ເຈົ້າຈະເຫັນວ່າ

ເຖິງແມ່ນພຣະອົງກິນອາຫານແບບດຽວກັນກັບມະນຸດ, ນຸ່ງເຄື່ອງແບບດຽວກັນ, ເພີດເພີນໃນສິ່ງດຽວກັນກັບສິ່ງທີ່ພວກເຂົາເພີດເພີນ ແລະ ດຳລົງຊີວິດ ແລະ ອາໄສກັບພວກເຂົາ, ແຕ່ພຣະອົງກໍຍັງບໍ່ຄືມະນຸດ. ນີ້ບໍ່ແມ່ນຄວາມສຳຄັນຂອງຕົວປະກອບບໍ? ມັນແມ່ນຜ່ານສິ່ງຕ່າງໆເຫຼົ່ານີ້ຂອງມະນຸດ, ລິດອຳນາດຂອງພຣະເຈົ້າຈຶ່ງຖືກສະແດງອອກ; ມັນຄືຄວາມມືດມົວທີ່ກໍ່ໃຫ້ເກີດມີແສງສະຫວ່າງອັນລ້ຳຄ່າ.

ແນ່ນອນ ພຣະເຈົ້າບໍ່ເຮັດໃຫ້ພວກເຈົ້າເປັນຕົວປະກອບພຽງແຕ່ເພື່ອເຫັນແກ່ສິ່ງນັ້ນ. ກົງກັນຂ້າມມັນເປັນພຽງເມື່ອພາລະກິດນີ້ເກີດໝາກຜົນເທົ່ານັ້ນ ມັນຈຶ່ງຈະຊັດເຈນວ່າ ຄວາມກະບົດຂອງມະນຸດເປັນຕົວປະກອບຂອງອຸປະນິໄສອັນຊອບທຳຂອງພຣະເຈົ້າ ແລະ ມັນເປັນພຽງແຕ່ຍ້ອນພວກເຈົ້າເປັນຕົວປະກອບເທົ່ານັ້ນ ພວກເຈົ້າຈຶ່ງມີໂອກາດທີ່ຈະຮູ້ຈັກການສະແດງອອກໂດຍທຳມະຊາດຂອງອຸປະນິໄສອັນຊອບທຳຂອງພຣະເຈົ້າ. ພວກເຈົ້າຖືກພິພາກສາ ແລະ ຖືກຂ້ຽນຕີຍ້ອນຄວາມກະບົດຂອງພວກເຈົ້າ, ແຕ່ມັນຄືຄວາມກະບົດຂອງພວກເຈົ້າເຊັ່ນກັນທີ່ເຮັດໃຫ້ພວກເຈົ້າເປັນຕົວປະກອບ ແລະ ມັນເປັນຍ້ອນຄວາມກະບົດຂອງພວກເຈົ້າ, ພວກເຈົ້າຈຶ່ງໄດ້ຮັບຄວາມກະລຸນາອັນຍິ່ງໃຫຍ່ທີ່ພຣະເຈົ້າປະທານໃຫ້ແກ່ພວກເຈົ້າ. ຄວາມກະບົດຂອງພວກເຈົ້າເປັນຕົວປະກອບໃນອຳນາດອັນຍິ່ງໃຫຍ່ ແລະ ສະຕິປັນຍາຂອງພຣະເຈົ້າ ແລະ ມັນຍັງເປັນຍ້ອນຄວາມກະບົດຂອງພວກເຈົ້າ, ພວກເຈົ້າຈຶ່ງໄດ້ຮັບຄວາມລອດພົ້ນ ແລະ ພອນອັນຍິ່ງໃຫຍ່. ເຖິງແມ່ນພວກເຈົ້າຖືກເຮົາພິພາກສາຢູ່ຊ້ຳແລ້ວຊ້ຳອີກ, ພວກເຈົ້າກໍໄດ້ຮັບຄວາມລອດພົ້ນຢ່າງໃຫຍ່ຫຼວງທີ່ມະນຸດບໍ່ເຄີຍໄດ້ຮັບມາກ່ອນ. ພາລະກິດນີ້ມີຄວາມສຳຄັນທີ່ສຸດສຳລັບພວກເຈົ້າ. ການເປັນ "ຕົວປະກອບ" ຍັງມີຄຸນຄ່າຫຼາຍສຳລັບພວກເຈົ້າ: ພວກເຈົ້າຖືກຊ່ວຍໃຫ້ລອດພົ້ນ ແລະ ໄດ້ຮັບຄວາມກະລຸນາແຫ່ງການລອດພົ້ນ ຍ້ອນພວກເຈົ້າເປັນຕົວປະກອບ, ສະນັ້ນຕົວປະກອບດັ່ງກ່າວບໍ່ມີຄຸນຄ່າທີ່ສຸດບໍ? ມັນບໍ່ໄດ້ມີຄວາມສຳຄັນທີ່ສຸດບໍ? ມັນເປັນຍ້ອນພວກເຈົ້າດຳລົງຊີວິດໃນໂລກດຽວກັນ ນັ້ນກໍຄື ດິນແດນອັນສົກກະປົກຜືນດຽວກັນກັບພຣະເຈົ້າ, ພວກເຈົ້າຈຶ່ງເປັນຕົວປະກອບ ແລະ ໄດ້ຮັບຄວາມລອດພົ້ນອັນຍິ່ງໃຫຍ່ທີ່ສຸດ. ຖ້າພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງ, ຜູ້ໃດຈະມີຄວາມເມດຕາຕໍ່ພວກເຈົ້າ ແລະ ຜູ້ໃດຈະເບິ່ງແຍງພວກເຈົ້າ, ຜູ້ທີ່ເປັນຄົນຕ້ອຍຕ່ຳແບບນັ້ນ? ຜູ້ໃດຈະດູແລພວກເຈົ້າ? ຖ້າພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງເພື່ອປະຕິບັດພາລະກິດທ່າມກາງພວກເຈົ້າ, ເມື່ອໃດພວກເຈົ້າຈຶ່ງຈະໄດ້ຮັບຄວາມລອດພົ້ນນີ້ ທີ່ຜູ້ຄົນຢູ່ມາກ່ອນພວກເຈົ້າບໍ່ເຄີຍໄດ້ຮັບມາກ່ອນ? ຖ້າເຮົາບໍ່ໄດ້ກາຍມາເປັນເນື້ອໜັງເພື່ອດູແລພວກເຈົ້າ, ເພື່ອພິພາກສາຄວາມຜິດບາບຂອງພວກເຈົ້າ, ພວກເຈົ້າຈະບໍ່ຕົກລົງສູ່ດິນແດນມໍລະນາຕັ້ງແຕ່ດົນແລ້ວບໍ? ຖ້າເຮົາບໍ່ໄດ້ກາຍມາເປັນເນື້ອໜັງ ແລະ ຖ່ອມຕົນລົງທ່າມກາງພວກເຈົ້າ, ພວກເຈົ້າຈະມີຄຸນສົມບັດເພື່ອເປັນຕົວປະກອບໃນອຸປະນິໄສອັນຊອບທຳຂອງພຣະເຈົ້າໄດ້ແນວໃດ? ພວກເຈົ້າບໍ່ແມ່ນຕົວປະກອບ ຍ້ອນເຮົາສະຖິດໃນຮູບຮ່າງມະນຸດ ແລະ ມາຢູ່ທ່າມກາງພວກເຈົ້າເພື່ອເຮັດໃຫ້ພວກເຈົ້າສາມາດໄດ້ຮັບຄວາມລອດພົ້ນອັນຍິ່ງໃຫຍ່ທີ່ສຸດບໍ? ພວກເຈົ້າບໍ່ໄດ້ຮັບຄວາມລອດພົ້ນນີ້ ຍ້ອນເຮົາໄດ້ກາຍມາເປັນເນື້ອໜັງບໍ? ຖ້າພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງເພື່ອດຳລົງຊີວິດກັບພວກເຈົ້າ, ພວກເຈົ້າຈະຍັງຄົ້ນພົບຢູ່ບໍວ່າພວກເຈົ້າກຳລັງດຳລົງຊີວິດຕ່ຳກວ່າໝາ ແລະ ໝູຢູ່ໃນນະຮົກຂອງມະນຸດ? ພວກເຈົ້າບໍ່ໄດ້ຖືກຂ້ຽນຕີ

ແລະ ຖືກພິພາກສາ ຍ້ອນພວກເຈົ້າເປັນຕົວປະກອບໃນພາລະກິດຂອງເຮົາທີ່ຢູ່ໃນເນື້ອໜັງບໍ? ບໍ່ມີພາລະກິດໃດທີ່ເໝາະສົມກັບພວກເຈົ້າຫຼາຍໄປກວ່າພາລະກິດຂອງຕົວປະກອບ, ເພາະມັນເປັນຍ້ອນພວກເຈົ້າເປັນຕົວປະກອບ, ພວກເຈົ້າຈຶ່ງໄດ້ຮັບຄວາມລອດພົ້ນທ່າມກາງການພິພາກສາ. ພວກເຈົ້າບໍ່ຮູ້ສຶກບໍວ່າ ການມີຄຸນສົມບັດເຮັດໜ້າທີ່ດັ່ງຕົວປະກອບຄືພອນອັນຍິ່ງໃຫຍ່ທີ່ສຸດໃນຊີວິດຂອງພວກເຈົ້າ? ພວກເຈົ້າພຽງແຕ່ປະຕິບັດພາລະກິດຂອງຕົວປະກອບ, ແຕ່ພວກເຈົ້າໄດ້ຮັບຄວາມລອດພົ້ນດັ່ງກ່າວດັ່ງທີ່ພວກເຈົ້າບໍ່ເຄີຍໄດ້ຮັບ ຫຼື ແມ່ນແຕ່ໄດ້ຈິນຕະນາການມາກ່ອນ. ມື້ນີ້, ໜ້າທີ່ຂອງພວກເຈົ້າຄືການເປັນຕົວປະກອບ ແລະ ລາງວັນທີ່ເໝາະສົມຂອງພວກເຈົ້າກໍຄືການໄດ້ຮັບພອນຕະຫຼອດໄປເປັນນິດໃນອະນາຄົດ. ຄວາມລອດພົ້ນທີ່ພວກເຈົ້າໄດ້ຮັບບໍ່ແມ່ນຄວາມຮູ້ບາງຢ່າງທີ່ຊົ່ວຄາວ ຫຼື ຄວາມຮູ້ບາງສ່ວນທີ່ຜ່ານໄປມາສຳລັບປັດຈຸບັນ, ແຕ່ເປັນພອນອັນຍິ່ງໃຫຍ່ກວ່າ: ເປັນການສືບຕໍ່ຂອງຊີວິດຊົ່ວນິດນິລັນ. ເຖິງແມ່ນເຮົາໄດ້ໃຊ້ "ຕົວປະກອບ" ເພື່ອເອົາຊະນະພວກເຈົ້າ, ພວກເຈົ້າກໍຄວນຮູ້ຈັກວ່າ ຄວາມລອດພົ້ນ ແລະ ພອນນີ້ແມ່ນໄດ້ຖືກມອບໃຫ້ກໍເພື່ອຮັບເອົາພວກເຈົ້າ; ມັນແມ່ນເພື່ອເຫັນແກ່ການເອົາຊະນະ ແລະ ມັນຍັງເພື່ອວ່າ ເຮົາອາດຈະໄດ້ຮັບພວກເຈົ້າໄດ້ດີກວ່າ. "ຕົວປະກອບ" ຄືຄວາມຈິງ, ແຕ່ເຫດຜົນທີ່ພວກເຈົ້າເປັນຕົວປະກອບກໍຍ້ອນຄວາມກະບົດຂອງພວກເຈົ້າ ແລະ ມັນເປັນຍ້ອນສິ່ງນີ້ ພວກເຈົ້າຈຶ່ງໄດ້ຮັບພອນທີ່ບໍ່ມີຜູ້ໃດເຄີຍໄດ້ຮັບມາກ່ອນ. ມື້ນີ້ ພວກເຈົ້າຖືກສ້າງໃຫ້ເຫັນ ແລະ ໄດ້ຍິນ; ມື້ອື່ນ ພວກເຈົ້າຈະໄດ້ຮັບ ແລະ ຍິ່ງໄປກວ່ານັ້ນ ພວກເຈົ້າຈະໄດ້ຮັບພອນຢ່າງໃຫຍ່ຫຼວງ. ສະນັ້ນ ຕົວປະກອບບໍ່ໄດ້ມີຄຸນຄ່າທີ່ສຸດບໍ? ຜົນຂອງພາລະກິດແຫ່ງການເອົາຊະນະໃນປັດຈຸບັນແມ່ນຖືກບັນລຸຜ່ານອຸປະນິໄສທີ່ກະບົດຂອງພວກເຈົ້າ ທີ່ເຮັດໜ້າທີ່ເປັນຕົວປະກອບ. ນັ້ນກໍຄືຈຸດສູງສຸດຂອງຂັ້ນຕອນທີສອງໃນການຂ້ຽນຕີ ແລະ ການພິພາກສາແມ່ນເພື່ອໃຊ້ຄວາມສົກກະປົກ ແລະ ຄວາມກະບົດຂອງພວກເຈົ້າທີ່ເປັນຕົວປະກອບ, ເຮັດໃຫ້ພວກເຈົ້າໄດ້ເບິ່ງເຫັນອຸປະນິໄສອັນຊອບທຳຂອງພຣະເຈົ້າ. ເມື່ອພວກເຈົ້າເຮັດໃຫ້ຕົນເອງເຊື່ອຟັງອີກຄັ້ງ ໃນລະຫວ່າງຂັ້ນຕອນທີສອງຂອງການພິພາກສາ ແລະ ການຂ້ຽນຕີ, ແລ້ວອຸປະນິໄສອັນຊອບທຳທັງໝົດຂອງພຣະເຈົ້າກໍຈະຖືກສະແດງອອກແກ່ພວກເຈົ້າຢ່າງເປີດເຜີຍ. ນີ້ໝາຍຄວາມວ່າ ເມື່ອການຍອມຮັບພາລະກິດແຫ່ງການເອົາຊະນະຂອງພວກເຈົ້າມາເຖິງຈຸດສິ້ນສຸດ, ນີ້ຍັງເປັນຕອນທີ່ພວກເຈົ້າສຳເລັດການປະຕິບັດໜ້າທີ່ຂອງຕົວປະກອບ. ມັນບໍ່ແມ່ນເຈດຕະນາຂອງເຮົາທີ່ຈະຕິດປ້າຍໃສ່ພວກເຈົ້າ. ກົງກັນຂ້າມ ເຮົາກຳລັງໃຊ້ບົດບາດຂອງພວກເຈົ້າດັ່ງຜູ້ໃຫ້ບໍລິການເພື່ອປະຕິບັດຂັ້ນຕອນທຳອິດຂອງພາລະກິດແຫ່ງການເອົາຊະນະ, ເພື່ອສະແດງອຸປະນິໄສອັນຊອບທຳ ແລະ ບໍ່ສາມາດລ່ວງເກີນໄດ້ຂອງພຣະເຈົ້າ. ຜ່ານຄວາມແຕກຕ່າງຂອງພວກເຈົ້າ, ຜ່ານຄວາມກະບົດຂອງພວກເຈົ້າທີ່ເຮັດໜ້າທີ່ເປັນຕົວປະກອບ, ຜົນຂອງຂັ້ນຕອນທີສອງຂອງພາລະກິດແຫ່ງການເອົາຊະນະຈຶ່ງໄດ້ຖືກບັນລຸ, ໄດ້ຖືກເປີດເຜີຍອຸປະນິໄສອັນຊອບທຳຂອງພຣະເຈົ້າໃຫ້ແກ່ພວກເຈົ້າຢ່າງສົມບູນ ເຊິ່ງບໍ່ໄດ້ຖືກເປີດເຜີຍອອກຢ່າງທັງໝົດໃນຂັ້ນຕອນທຳອິດ ແລະ ສະແດງໃຫ້ພວກເຈົ້າເຫັນເຖິງອຸປະນິໄສອັນຊອບທຳທັງໝົດຂອງພຣະເຈົ້າ, ທຸກສິ່ງທີ່ພຣະອົງເປັນ ເຊິ່ງປະກອບມີສະຕິປັນຍາ, ຄວາມອັດສະຈັນ ແລະ ຄວາມບໍລິສຸດດັ່ງເດີມແຫ່ງ

ພາລະກິດຂອງພຣະອົງ. ຜົນຂອງພາລະກິດດັ່ງກ່າວແມ່ນຖືກບັນລຸຜ່ານການເອົາຊະນະໃນລະຫວ່າງເວລາທີ່ແຕກຕ່າງກັນ ແລະ ຜ່ານລະດັບຂອງການພິພາກສາທີ່ແຕກຕ່າງກັນ. ຍິ່ງການພິພາກສາໃກ້ຈຸດສູງສຸດສໍ່າໃດ, ມັນກໍຍິ່ງເປີດເຜີຍເຖິງອຸປະນິໄສທີ່ກະບົດຂອງຜູ້ຄົນຫຼາຍສໍ່ານັ້ນ ແລະ ການເອົາຊະນະກໍຍິ່ງມີປະສິດທິພາບສໍ່ານັ້ນ. ອຸປະນິໄສອັນຊອບທຳທັງໝົດຂອງພຣະເຈົ້າແມ່ນຖືກເປີດເຜີຍຢ່າງຊັດເຈນໃນລະຫວ່າງພາລະກິດແຫ່ງການເອົາຊະນະນີ້. ພາລະກິດແຫ່ງການເອົາຊະນະຖືກແບ່ງແຍກອອກເປັນສອງບາດກ້າວ ແລະ ມີຂັ້ນຕອນ ແລະ ລະດັບທີ່ແຕກຕ່າງກັນ ແລະ ແນ່ນອນ ຜົນທີ່ໄດ້ຖືກບັນລຸກໍແຕກຕ່າງເຊັ່ນກັນ. ນີ້ໝາຍຄວາມວ່າ ລະດັບຄວາມອ່ອນນ້ອມຖ່ອມຕົນຂອງຜູ້ຄົນຍິ່ງເລິກເຊິ່ງຫຼາຍຂຶ້ນ. ມີແຕ່ຫຼັງຈາກນີ້ເທົ່ານັ້ນ ຜູ້ຄົນຈຶ່ງສາມາດຖືກນຳເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໄປສູ່ຄວາມສົມບູນ; ມີແຕ່ຫຼັງຈາກທີ່ພາລະກິດແຫ່ງການເອົາຊະນະທັງໝົດຖືກເຮັດໃຫ້ສຳເລັດ (ເວລາທີ່ຂັ້ນຕອນທີສອງຂອງການພິພາກສາໄດ້ບັນລຸຜົນສຸດທ້າຍຂອງມັນ), ຜູ້ຄົນຈຶ່ງບໍ່ຖືກພິພາກສາອີກຕໍ່ໄປ ແຕ່ຖືກອະນຸຍາດໃຫ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການຜະເຊີນຊີວິດ. ດ້ວຍວ່າການພິພາກສາເປັນຕົວແທນຂອງການເອົາຊະນະ ແລະ ການເອົາຊະນະກໍຢູ່ໃນຮູບຮ່າງຂອງການພິພາກສາ ແລະ ການຂ້ຽນຕີ.

ພຣະເຈົ້າກາຍມາເປັນເນື້ອໜັງໃນສະຖານທີ່ໆຫຼ້າຫຼັງ ແລະ ສົກກະປົກທີ່ສຸດໃນບັນດາສະຖານທີ່ທັງປວງ ແລະ ດ້ວຍວິທີນີ້ເທົ່ານັ້ນ ພຣະເຈົ້າຈຶ່ງສາມາດສະແດງຢ່າງຊັດເຈນເຖິງອຸປະນິໄສອັນບໍລິສຸດ ແລະ ຊອບທຳທັງໝົດຂອງພຣະອົງ. ແລ້ວອຸປະນິໄສອັນຊອບທຳຂອງພຣະອົງຖືກສະແດງອອກຜ່ານຫຍັງ? ມັນຖືກສະແດງອອກ ເມື່ອພຣະອົງພິພາກສາຄວາມຜິດບາບຂອງມະນຸດ, ເມື່ອພຣະອົງພິພາກສາຊາຕານ, ເມື່ອພຣະອົງກຽດຊັງຄວາມຜິດບາບ ແລະ ເມື່ອພຣະອົງລັງກຽດສັດຕູທີ່ຕໍ່ຕ້ານ ແລະ ກະບົດຕໍ່ພຣະອົງ. ພຣະທຳທີ່ເຮົາກ່າວໃນມື້ນີ້ແມ່ນເພື່ອພິພາກສາຄວາມຜິດບາບຂອງມະນຸດ, ເພື່ອພິພາກສາຄວາມບໍ່ຊອບທຳຂອງມະນຸດ, ເພື່ອສາບແຊ່ງຄວາມບໍ່ເຊື່ອຟັງຂອງມະນຸດ. ຄວາມບໍ່ຊື່ສັດ ແລະ ຄວາມທໍລະຍົດຂອງມະນຸດ, ຄຳເວົ້າ ແລະ ການກະທຳຂອງມະນຸດ, ທຸກສິ່ງທີ່ບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າຕ້ອງຕົກຢູ່ພາຍໃຕ້ການພິພາກສາ ແລະ ຄວາມບໍ່ເຊື່ອຟັງທັງໝົດຂອງມະນຸດແມ່ນໄດ້ຖືກປະນາມວ່າເປັນຄວາມຜິດບາບ. ພຣະທຳຂອງພຣະອົງກ່ຽວພັນກັບຫຼັກການແຫ່ງການພິພາກສາ; ພຣະອົງໃຊ້ການພິພາກສາແຫ່ງຄວາມບໍ່ຊອບທຳຂອງມະນຸດ, ຄຳສາບແຊ່ງແຫ່ງຄວາມກະບົດຂອງມະນຸດ ແລະ ການເປີດໂປງໃບໜ້າທີ່ຂີ້ຮ້າຍຂອງມະນຸດເພື່ອສະແດງອອກເຖິງອຸປະນິໄສອັນຊອບທຳຂອງພຣະອົງ. ຄວາມບໍລິສຸດເປັນຕົວແທນໃຫ້ແກ່ອຸປະນິໄສອັນຊອບທຳຂອງພຣະອົງ ແລະ ໃນຄວາມເປັນຈິງແລ້ວ ຄວາມບໍລິສຸດຂອງພຣະເຈົ້າຄືອຸປະນິໄສອັນຊອບທຳແທ້ຈິງຂອງພຣະອົງ. ອຸປະນິໄສອັນເສື່ອມຊາມຂອງພວກເຈົ້າແມ່ນບໍລິບົດແຫ່ງພຣະທຳໃນປັດຈຸບັນ, ເຮົາໃຊ້ພວກມັນເພື່ອກ່າວ ແລະ ພິພາກສາ ແລະ ເພື່ອປະຕິບັດພາລະກິດແຫ່ງການເອົາຊະນະ. ສິ່ງນີ້ເທົ່ານັ້ນຄືພາລະກິດທີ່ແທ້ຈິງ ແລະ ສິ່ງນີ້ເທົ່ານັ້ນທີ່ເຮັດໃຫ້ຄວາມບໍລິສຸດຂອງພຣະເຈົ້າແຈ້ງສະຫວ່າງຢ່າງສົມບູນ. ຖ້າບໍ່ມີຮ່ອງຮອຍຂອງອຸປະນິໄສອັນເສື່ອມຊາມໃນຕົວເຈົ້າ, ແລ້ວພຣະເຈົ້າຈະບໍ່ພິພາກສາເຈົ້າ ຫຼື ພຣະອົງຈະບໍ່ສະແດງອຸປະນິໄສອັນຊອບທຳຂອງພຣະອົງຕໍ່ເຈົ້າ. ຍ້ອນເຈົ້າມີອຸປະນິໄສອັນເສື່ອມຊາມ, ພຣະເຈົ້າຈະບໍ່ປ່ອຍເຈົ້າໄປ ແລະ ມັນແມ່ນ

ຜ່ານສິ່ງນີ້ ຄວາມບໍລິສຸດຂອງພຣະອົງຈຶ່ງຖືກສະແດງອອກ. ຖ້າພຣະເຈົ້າເຫັນວ່າ ຄວາມສົກກະປົກ ແລະ ຄວາມກະບົດຂອງມະນຸດມີຫຼາຍເກີນໄປ ແຕ່ພຣະອົງບໍ່ໄດ້ກ່າວ ຫຼື ພິພາກສາເຈົ້າ ຫຼື ບໍ່ໄດ້ຂ້ຽນຕີເຈົ້າ ຍ້ອນຄວາມບໍ່ຊອບທຳຂອງເຈົ້າ, ແລ້ວສິ່ງນີ້ກໍຈະພິສູດວ່າພຣະອົງບໍ່ແມ່ນພຣະເຈົ້າ, ຍ້ອນວ່າພຣະອົງຈະບໍ່ມີຄວາມກຽດຊັງຄວາມຜິດບາບ; ພຣະອົງຈະສົກກະປົກຄືກັບມະນຸດ. ໃນປັດຈຸບັນ, ມັນເປັນຍ້ອນຄວາມສົກກະປົກຂອງເຈົ້າ ເຮົາຈຶ່ງພິພາກສາເຈົ້າ ແລະ ມັນເປັນຍ້ອນຄວາມເສື່ອມຊາມ ແລະ ຄວາມກະບົດຂອງເຈົ້າ ເຮົາຈຶ່ງຂ້ຽນຕີເຈົ້າ. ເຮົາບໍ່ໄດ້ໂອ້ອວດລິດອຳນາດຂອງເຮົາຕໍ່ພວກເຈົ້າ ຫຼື ຕັ້ງໃຈກົດຂີ່ພວກເຈົ້າ; ເຮົາເຮັດສິ່ງເຫຼົ່ານີ້ ກໍຍ້ອນພວກເຈົ້າຜູ້ທີ່ເກີດໃນດິນແດນອັນສົກກະປົກນີ້ ຖືກເຮັດໃຫ້ເປິເປື້ອນດ້ວຍຄວາມສົກກະປົກຢ່າງຮຸນແຮງ. ພວກເຈົ້າໄດ້ສູນເສຍຄວາມຊື່ສັດ ແລະ ຄວາມເປັນມະນຸດຂອງພວກເຈົ້າໄປແລ້ວ ຄືກັບໝູທີ່ອາໄສຢູ່ໃນບ່ອນສົກກະປົກ. ມັນເປັນຍ້ອນຄວາມສົກກະປົກ ແລະ ຄວາມເສື່ອມຊາມຂອງເຈົ້າ ພວກເຈົ້າຈຶ່ງຖືກພິພາກສາ ແລະ ເຮົາຈຶ່ງປ່ອຍຄວາມໂກດຮ້າຍຂອງເຮົາມາເຖິງພວກເຈົ້າ. ມັນເປັນຍ້ອນການພິພາກສາຈາກພຣະທຳເຫຼົ່ານີ້ແທ້ໆ ພວກເຈົ້າຈຶ່ງສາມາດເຫັນວ່າພຣະເຈົ້າເປັນພຣະເຈົ້າທີ່ຊອບທຳ ແລະ ພຣະເຈົ້າເປັນພຣະເຈົ້າທີ່ບໍລິສຸດ; ມັນເປັນຍ້ອນຄວາມບໍລິສຸດຂອງພຣະອົງ ແລະ ຄວາມຊອບທຳຂອງພຣະອົງແທ້ໆ, ພຣະອົງຈຶ່ງພິພາກສາພວກເຈົ້າ ແລະ ປ່ອຍຄວາມໂກດຮ້າຍຂອງພຣະອົງໃສ່ພວກເຈົ້າ; ມັນເປັນຍ້ອນພຣະອົງເຫັນຄວາມກະບົດຂອງມະນຸດຊາດທີ່ພຣະອົງເປີດເຜີຍອຸປະນິໄສອັນຊອບທຳຂອງພຣະອົງຢ່າງແນ່ນອນ. ຄວາມສົກກະປົກ ແລະ ຄວາມເສື່ອມຊາມຂອງມະນຸດຊາດເຮັດໃຫ້ຄວາມບໍລິສຸດຂອງພຣະອົງປາກົດອອກມາ. ສິ່ງນີ້ກໍພຽງພໍທີ່ຈະສະແດງວ່າພຣະອົງເປັນພຣະເຈົ້າເອງ ຜູ້ທີ່ບໍລິສຸດ ແລະ ສົມບູນ ແລະ ຍັງດຳລົງຊີວິດຢູ່ໃນດິນແດນທີ່ສົກກະປົກ. ຖ້າບຸກຄົນໃດໜຶ່ງ ກິ້ງເກືອກໃນບຶງໜອງກັບຄົນອື່ນ ແລະ ບໍ່ມີຫຍັງທີ່ບໍລິສຸດກ່ຽວກັບເຂົາ ແລະ ເຂົາບໍ່ມີອຸປະນິໄສທີ່ຊອບທຳ, ແລ້ວເຂົາກໍຈະບໍ່ມີຄຸນສົມບັດພິພາກສາຄວາມຊົ່ວຮ້າຍຂອງມະນຸດ ຫຼື ເຂົາຈະບໍ່ເໝາະສົມປະຕິບັດການພິພາກສາຂອງມະນຸດ. ຜູ້ຄົນທີ່ສົກກະປົກສຳລັບອີກຄົນໜຶ່ງຈະສາມາດມີຄຸນສົມບັດພິພາກສາຄົນທີ່ເປັນຄືກັບພວກເຂົາໄດ້ແນວໃດ? ມີພຽງແຕ່ພຣະເຈົ້າອົງບໍລິສຸດເທົ່ານັ້ນທີ່ສາມາດພິພາກສາມະນຸດຊາດສົກກະປົກທັງປວງ. ມະນຸດຈະສາມາດພິພາກສາຄວາມຜິດບາບຂອງມະນຸດໄດ້ແນວໃດ? ມະນຸດຈະສາມາດເຫັນຄວາມຜິດບາບຂອງມະນຸດ ແລະ ມະນຸດຈະສາມາດມີຄຸນສົມບັດເພື່ອປະນາມຄວາມຜິດບາບເຫຼົ່ານີ້ໄດ້ແນວໃດ? ຖ້າພຣະເຈົ້າບໍ່ມີຄຸນສົມບັດພິພາກສາຄວາມຜິດບາບຂອງມະນຸດ, ແລ້ວພຣະອົງຈະເປັນພຣະເຈົ້າທີ່ຊອບທຳໄດ້ແນວໃດ? ມັນເປັນຍ້ອນຜູ້ຄົນເປີດເຜີຍອຸປະນິໄສອັນເສື່ອມຊາມພຣະເຈົ້າຈຶ່ງ/ກ່າວເພື່ອພິພາກສາພວກເຂົາ ແລະ ມີແຕ່ເມື່ອນັ້ນພວກເຂົາຈຶ່ງສາມາດເຫັນວ່າພຣະອົງແມ່ນພຣະເຈົ້າຜູ້ບໍລິສຸດ. ໃນຂະນະທີ່ພຣະອົງພິພາກສາ ແລະ ຂ້ຽນຕີມະນຸດຍ້ອນຄວາມຜິດບາບຂອງເຂົາ, ໃນຂະນະດຽວກັນກໍເປີດໂປງຄວາມຜິດບາບຂອງມະນຸດ, ບໍ່ມີຜູ້ໃດ ຫຼື ສິ່ງໃດສາມາດຫຼົບໜີການພິພາກສານີ້; ທຸກສິ່ງທີ່ສົກກະປົກແມ່ນຖືກພຣະອົງພິພາກສາ ແລະ ມັນແມ່ນດ້ວຍເຫດນີ້ເທົ່ານັ້ນ ອຸປະນິໄສຂອງພຣະອົງຈຶ່ງຈຶ່ງຖືກເປີດເຜີຍວ່າຊອບທຳ. ຖ້າບໍ່ດັ່ງນັ້ນ, ມັນຈະສາມາດເວົ້າໄດ້ແນວໃດວ່າພວກເຈົ້າຄືຕົວປະກອບທັງໃນນາມ ແລະ ແທ້ຈິງ?

ມີຄວາມແຕກຕ່າງຢ່າງໃຫຍ່ຫຼວງລະຫວ່າງພາລະກິດທີ່ເກີດຂຶ້ນໃນອິດສະຣາເອນ ແລະ ພາລະກິດໃນປັດຈຸບັນ. ພຣະເຢໂຮວານຳພາຊີວິດຂອງຊາວອິດສະຣາເອນ ແລະ ບໍ່ມີການຂ້ຽນຕີ ແລະ ການພິພາກສາຫຼາຍຢ່າງ, ຍ້ອນໃນເວລານັ້ນ ຜູ້ຄົນເຂົ້າໃຈໜ້ອຍດຽວກ່ຽວກັບໂລກ ແລະ ມີອຸປະນິໄສທີ່ເສື່ອມຊາມພຽງເລັກນ້ອຍ. ໃນຕອນນັ້ນ, ຊາວອິດສະຣາເອນເຊື່ອຟັງພຣະເຢໂຮວາໂດຍປະລິຍາຍ. ເມື່ອພຣະອົງບອກພວກເຂົາໃຫ້ສ້າງແທ່ນບູຊາ, ພວກເຂົາກໍສ້າງແທ່ນບູຊາທັນທີ; ເມື່ອພຣະອົງບອກພວກເຂົາໃຫ້ນຸ່ງເສື້ອຄຸມຂອງປະໂລຫິດ, ພວກເຂົາກໍເຊື່ອຟັງ. ໃນຕອນນັ້ນ, ພຣະເຢໂຮວາເປັນຄືກັບຄົນລ້ຽງແກະທີ່ເບິ່ງແຍງຝູງແກະ, ຝູງແກະກໍຕິດຕາມການນຳພາຂອງຄົນລ້ຽງແກະ ແລະ ກິນຫຍ້າໃນທົ່ງຫຍ້າ; ພຣະເຢໂຮວານຳພາຊີວິດຂອງພວກເຂົາ, ຊີ້ນຳພວກເຂົາໃນວິທີທີ່ພວກເຂົາກິນ, ນຸ່ງເຄື່ອງ, ອາໄສ ແລະ ເດີນທາງ. ນັ້ນບໍ່ແມ່ນເວລາສະແດງອຸປະນິໄສຂອງພຣະເຈົ້າ, ຍ້ອນມະນຸດຊາດໃນເວລານັ້ນຫາກໍເກີດໃໝ່; ມີຄົນຈຳນວນເລັກນ້ອຍທີ່ກະບົດ ແລະ ຕໍ່ຕ້ານ, ບໍ່ມີຄວາມສົກກະປົກຫຼາຍໃນທ່າມກາງມະນຸດຊາດ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຶ່ງບໍ່ສາມາດເຮັດໜ້າທີ່ເປັນຕົວປະກອບໃນອຸປະນິໄສຂອງພຣະເຈົ້າ. ມັນແມ່ນຜ່ານຜູ້ຄົນທີ່ມາຈາກດິນແດນທີ່ສົກກະປົກ, ຄວາມບໍລິສຸດຂອງພຣະເຈົ້າຈຶ່ງຖືກສະແດງອອກ; ໃນປັດຈຸບັນ, ພຣະອົງໃຊ້ຄວາມສົກກະປົກທີ່ສະແດງອອກໃນຜູ້ຄົນເຫຼົ່ານີ້ທີ່ຢູ່ໃນດິນແດນແຫ່ງຄວາມສົກກະປົກນີ້ເພື່ອພິພາກສາ ແລະ ດັ່ງນັ້ນ ສິ່ງດັ່ງກ່າວຈຶ່ງເປັນສິ່ງທີ່ຖືກສະແດງອອກທ່າມກາງການພິພາກສາ. ເປັນຫຍັງພຣະອົງຈຶ່ງພິພາກສາ? ພຣະອົງສາມາດກ່າວພຣະທຳແຫ່ງການພິພາກສາກໍ ຍ້ອນພຣະອົງກຽດຊັງຄວາມຜິດບາບ; ພຣະອົງຈະສາມາດໃຈຮ້າຍແບບນັ້ນໄດ້ແນວໃດຖ້າພຣະອົງບໍ່ກຽດຊັງຄວາມກະບົດຂອງມະນຸດຊາດ? ຖ້າບໍ່ມີຄວາມເບື່ອໜ່າຍພາຍໃນພຣະອົງ, ບໍ່ມີຄວາມລັງກຽດຢ່າງແຮງ, ຖ້າພຣະອົງບໍ່ສົນໃຈຕໍ່ຄວາມກະບົດຂອງຜູ້ຄົນ, ແລ້ວນັ້ນກໍຈະພິສູດວ່າພຣະອົງສົກກະປົກສໍ່າກັບມະນຸດ. ການທີ່ພຣະອົງສາມາດພິພາກສາ ແລະ ຂ້ຽນຕີມະນຸດກໍແມ່ນຍ້ອນພຣະອົງກຽດຊັງຄວາມສົກກະປົກ ແລະ ສິ່ງທີ່ພຣະອົງກຽດຊັງແມ່ນບໍ່ມີຢູ່ໃນພຣະອົງ. ຖ້າມີຄວາມຕໍ່ຕ້ານ ແລະ ຄວາມກະບົດໃນພຣະອົງເຊັ່ນກັນ, ພຣະອົງຈະບໍ່ກຽດຊັງຄົນທີ່ຕໍ່ຕ້ານ ແລະ ກະບົດ. ຖ້າພາລະກິດແຫ່ງຍຸກສຸດທ້າຍຖືກປະຕິບັດໃນອິດສະຣາເອນ, ຈະບໍ່ມີຄວາມໝາຍຫຍັງໃນພາລະກິດນັ້ນເລີຍ. ເປັນຫຍັງພາລະກິດແຫ່ງຍຸກສຸດທ້າຍຈຶ່ງເກີດຂຶ້ນໃນປະເທດຈີນ ເຊິ່ງເປັນສະຖານທີ່ງມືດມົວທີ່ສຸດ ແລະ ຫຼ້າຫຼັງທີ່ສຸດໃນບັນດາສະຖານທີ່ທັງປວງ? ມັນແມ່ນເພື່ອສະແດງຄວາມບໍລິສຸດ ແລະ ຄວາມຊອບທຳຂອງພຣະອົງ. ສະຫຼຸບກໍຄື ຍິ່ງສະຖານທີ່ມືດມົວສໍ່າໃດ, ຄວາມບໍລິສຸດຂອງພຣະເຈົ້າກໍຍິ່ງຖືກສະແດງອອກມາຢ່າງຊັດເຈນສໍ່ານັ້ນ. ໃນຄວາມເປັນຈິງແລ້ວ, ທຸກສິ່ງນີ້ແມ່ນເພື່ອເຫັນແກ່ພາລະກິດຂອງພຣະເຈົ້າ. ມີພຽງແຕ່ມື້ນີ້ເທົ່ານັ້ນ ພວກເຈົ້າຈຶ່ງຮັບຮູ້ວ່າພຣະເຈົ້າໄດ້ລົງມາຈາກສະຫວັນເພື່ອຢືນຢູ່ທ່າມກາງພວກເຈົ້າ, ສະແດງຄວາມສົກກະປົກ ແລະ ຄວາມກະບົດຂອງພວກເຈົ້າອອກມາ ແລະ ມີພຽງຕອນນີ້ເທົ່ານັ້ນ ພວກເຈົ້າຈຶ່ງຮູ້ຈັກພຣະເຈົ້າ. ນີ້ບໍ່ແມ່ນເປັນການຍົກຂຶ້ນຢ່າງຍິ່ງໃຫຍ່ທີ່ສຸດບໍ? ໃນຄວາມເປັນຈິງແລ້ວ, ພວກເຈົ້າເປັນກຸ່ມຄົນໃນປະເທດຈີນທີ່ຖືກເລືອກ. ແລ້ວຍ້ອນພວກເຈົ້າຖືກເລືອກ ແລະ ໄດ້ຮັບຄວາມກະລຸນາຂອງພຣະເຈົ້າ ແຕ່ ຍ້ອນພວກເຈົ້າບໍ່ສົມຄວນທີ່ຈະໄດ້

ຮັບຄວາມກະລຸນາອັນຍິ່ງໃຫຍ່ດັ່ງກ່າວ, ສິ່ງນີ້ຈຶ່ງພິສູດວ່າ ທຸກສິ່ງນີ້ຄືການຍົກພວກເຈົ້າຂຶ້ນຢ່າງສູງສຸດ. ພຣະເຈົ້າໄດ້ປາກົດຕໍ່ພວກເຈົ້າ ແລະ ສະແດງໃຫ້ພວກເຈົ້າເຫັນເຖິງອຸປະນິໄສອັນບໍລິສຸດທັງໝົດຂອງພຣະອົງ ແລະ ພຣະອົງໄດ້ມອບທຸກສິ່ງນັ້ນໃຫ້ແກ່ພວກເຈົ້າ ແລະ ເຮັດໃຫ້ພວກເຈົ້າໄດ້ຮັບພອນທັງໝົດທີ່ພວກເຈົ້າສາມາດຮັບໄດ້. ບໍ່ພຽງແຕ່ພວກເຈົ້າໄດ້ຊີມລົດຊາດອຸປະນິໄສອັນຊອບທຳຂອງພຣະເຈົ້າ ແຕ່ຍິ່ງໄປກວ່ານັ້ນ ພວກເຈົ້າຍັງໄດ້ຊີມລົດຊາດແຫ່ງຄວາມລອດພົ້ນຂອງພຣະເຈົ້າ, ການໄຖ່ຂອງພຣະເຈົ້າ ແລະ ຄວາມຮັກທີ່ໄຮ້ຂອບເຂດ ແລະ ບໍ່ມີສິ້ນສຸດຂອງພຣະເຈົ້າ. ພວກເຈົ້າທີ່ເປັນຄົນທີ່ສົກກະປົກທີ່ສຸດໃນບັນດາຄົນທັງປວງໄດ້ຮັບຄວາມກະລຸນາອັນໃຫຍ່ຫຼວງ, ພວກເຈົ້າບໍ່ໄດ້ຮັບພອນບໍ? ນີ້ບໍ່ແມ່ນການທີ່ພຣະເຈົ້າຍົກພວກເຈົ້າຂຶ້ນບໍ? ພວກເຈົ້າເຊິ່ງເປັນຜູ້ຄົນທີ່ມີວຸດທິພາວະຕໍ່າຕ້ອຍທີ່ສຸດໃນບັນດາທຸກສິ່ງ; ໂດຍທຳມະຊາດແລ້ວ ພວກເຈົ້າບໍ່ເໝາະສົມທີ່ຈະໄດ້ຮັບພອນອັນຍິ່ງໃຫຍ່ດັ່ງກ່າວ, ແຕ່ພຣະເຈົ້າໄດ້ຍົກເວັ້ນ ໂດຍຍົກເຈົ້າຂຶ້ນ. ເຈົ້າບໍ່ຮູ້ສຶກອັບອາຍບໍ? ຖ້າເຈົ້າບໍ່ສາມາດປະຕິບັດໜ້າທີ່ຂອງເຈົ້າ, ແລ້ວເຈົ້າກໍຈະລະອາຍໃຈຕົນເອງຢ່າງທີ່ສຸດ ແລະ ເຈົ້າຈະລົງໂທດຕົນເອງ. ມື້ນີ້, ເຈົ້າບໍ່ໄດ້ຖືກລົງວິໄນ ຫຼື ເຈົ້າບໍ່ໄດ້ຖືກລົງໂທດ; ເນື້ອໜັງຂອງເຈົ້າປອດໄພ ແລະ ເປັນປົກກະຕິດີ, ແຕ່ໃນທີ່ສຸດ ພຣະທຳເຫຼົ່ານີ້ຈະນຳເຈົ້າໄປສູ່ຄວາມອັບອາຍ. ຈົນເຖິງປັດຈຸບັນ, ເຮົາຍັງບໍ່ໄດ້ຂ້ຽນຕີຜູ້ໃດຜູ້ໜຶ່ງຢ່າງເປີດເຜີຍ; ພຣະທຳຂອງເຮົາອາດຮຸນແຮງ, ແຕ່ຈະໃຫ້ເຮົາປະຕິບັດແນວໃດຕໍ່ຜູ້ຄົນ? ເຮົາຜະເຊີນກັບພວກເຂົາ ແລະ ຕຳນິຕິເຕືອນພວກເຂົາ ແລະ ຕັກເຕືອນພວກເຂົາ. ເຮົາເຮັດແບບນີ້ບໍ່ແມ່ນຍ້ອນເຫດຜົນອື່ນໃດ ນອກຈາກເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນ. ພວກເຈົ້າບໍ່ເຂົ້າໃຈຄວາມປະສົງຂອງເຮົາແທ້ບໍ? ພວກເຈົ້າຄວນເຂົ້າໃຈໃນສິ່ງທີ່ເຮົາເວົ້າ ແລະ ຄວນຖືກກະຕຸ້ນໂດຍສິ່ງນັ້ນ. ມີພຽງແຕ່ຕອນນີ້ເທົ່ານັ້ນຈຶ່ງມີຫຼາຍຄົນທີ່ເຂົ້າໃຈ. ນີ້ບໍ່ແມ່ນພອນຂອງການເປັນຕົວປະກອບບໍ? ການເປັນຕົວປະກອບບໍ່ແມ່ນສິ່ງທີ່ໄດ້ຮັບພອນຫຼາຍທີ່ສຸດບໍ? ໃນທີ່ສຸດແລ້ວ ເມື່ອພວກເຈົ້າໄປເຜີຍແຜ່ຂ່າວປະເສີດ, ພວກເຈົ້າຈະເວົ້າແບບນີ້: "ພວກເຮົາເປັນຕົວປະກອບທຳມະດາ". ພວກເຂົາຈະຖາມເຈົ້າວ່າ "ມັນໝາຍຄວາມວ່າແນວໃດທີ່ເຈົ້າເປັນຕົວປະກອບທີ່ທຳມະດາ?" ແລ້ວເຈົ້າຈະເວົ້າວ່າ: "ພວກເຮົາເປັນຕົວປະກອບໃນພາລະກິດຂອງພຣະເຈົ້າ ແລະ ໃນລິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ. ອຸປະນິໄສອັນຊອບທຳທັງໝົດຂອງພຣະເຈົ້າຖືກເປີດເຜີຍສູ່ສາທາລະນະຍ້ອນຄວາມກະບົດຂອງພວກເຮົາ; ພວກເຮົາຄືອຸປະກອນຮັບໃຊ້ໃນພາລະກິດແຫ່ງຍຸກສຸດທ້າຍຂອງພຣະເຈົ້າ, ພວກເຮົາເປັນສ່ວນຫ້ອຍທ້າຍໃນພາລະກິດຂອງພຣະອົງ ແລະ ຍັງເປັນເຄື່ອງມືຂອງພາລະກິດນັ້ນ". ເມື່ອພວກເຂົາໄດ້ຍິນສິ່ງນັ້ນ, ພວກເຂົາກໍຈະປະຫຼາດໃຈ. ຕໍ່ໄປ ເຈົ້າກໍຈະເວົ້າວ່າ: "ພວກເຮົາແມ່ນຕົວຢ່າງ ແລະ ແບບຢ່າງສຳລັບການສຳເລັດພາລະກິດແຫ່ງຈັກກະວານທັງປວງຂອງພຣະເຈົ້າ ແລະ ສຳລັບການເອົາຊະນະມະນຸດຊາດທັງປວງຂອງພຣະອົງ. ສະຫຼຸບແລ້ວກໍຄື ບໍ່ວ່າພວກເຮົາບໍລິສຸດ ຫຼື ສົກກະປົກ, ພວກເຮົາກໍຍັງຈະໄດ້ຮັບພອນຫຼາຍກວ່າພວກເຈົ້າ, ຍ້ອນພວກເຮົາໄດ້ເຫັນພຣະເຈົ້າ ແລະ ຜ່ານທາງໂອກາດທີ່ພຣະອົງເອົາຊະນະພວກເຮົາ, ລິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າຖືກສະແດງອອກ; ມັນເປັນຍ້ອນພວກເຮົາສົກກະປົກ ແລະ ເສື່ອມຊາມເທົ່ານັ້ນ, ອຸປະນິໄສອັນຊອບທຳຂອງພຣະອົງຈຶ່ງປາກົດອອກມາ. ພວກເຈົ້າສາມາດເປັນ

ພະຍານແບບນັ້ນຕໍ່ພາລະກິດແຫ່ງຍຸກສຸດທ້າຍຂອງພຣະເຈົ້າບໍ? ພວກເຈົ້າບໍ່ມີຄຸນສົມບັດ! ນີ້ບໍ່ແມ່ນຫຍັງເລີຍ ນອກຈາກການທີ່ພຣະເຈົ້າຍົກພວກເຮົາໃຫ້ສູງຂຶ້ນ! ເຖິງແມ່ນພວກເຮົາອາດອວດດີ, ພວກເຮົາກໍສາມາດສັນລະເສີນພຣະເຈົ້າຢ່າງພູມໃຈ ຍ້ອນບໍ່ມີຜູ້ໃດສາມາດສືບທອດສັນຍາອັນຍິ່ງໃຫຍ່ດັ່ງກ່າວ ແລະ ບໍ່ມີຜູ້ໃດສາມາດໄດ້ຮັບພອນອັນຍິ່ງໃຫຍ່ດັ່ງກ່າວ. ພວກເຮົາຮູ້ສຶກດີໃຈຫຼາຍທີ່ພວກເຮົາຜູ້ທີ່ສົກກະປົກຫຼາຍ ໄດ້ສາມາດເຮັດໜ້າທີ່ເປັນຕົວປະກອບໃນລະຫວ່າງການຄຸ້ມຄອງຂອງພຣະເຈົ້າ". ແລ້ວເມື່ອພວກເຂົາຖາມວ່າ "ແມ່ນຫຍັງຄືຕົວຢ່າງ ແລະ ແບບຢ່າງ?" ເຈົ້າກໍເວົ້າວ່າ "ພວກເຮົາແມ່ນຄົນທີ່ກະບົດທີ່ສຸດ ແລະ ສົກກະປົກທີ່ສຸດໃນບັນດາມະນຸດຊາດ; ພວກເຮົາຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮຸນແຮງທີ່ສຸດ ແລະ ພວກເຮົາຫຼ້າຫຼັງ ແລະ ມີເນື້ອໜັງທີ່ຕໍ່າຕ້ອຍທີ່ສຸດ. ພວກເຮົາເປັນຕົວຢ່າງແທ້ຈິງຂອງຄົນທີ່ຖືກຊາຕານໃຊ້. ມື້ນີ້ ພວກເຮົາຖືກເລືອກໂດຍພຣະເຈົ້າໃຫ້ເປັນຜູ້ທຳອິດທ່າມກາງມະນຸດຊາດທີ່ຖືກເອົາຊະນະ ແລະ ພວກເຮົາເບິ່ງເຫັນອຸປະນິໄສອັນຊອບທຳຂອງພຣະເຈົ້າ ແລະ ສືບທອດສັນຍາຂອງພຣະອົງ; ພວກເຮົາຖືກໃຊ້ເພື່ອເອົາຊະນະອີກຫຼາຍຄົນ, ສະນັ້ນ ພວກເຮົາເປັນຕົວຢ່າງ ແລະ ແບບຢ່າງຂອງຄົນທີ່ຖືກເອົາຊະນະໃນບັນດາມະນຸດຊາດ". ບໍ່ມີຄຳພະຍານໃດທີ່ດີໄປກວ່າຖ້ອຍຄຳເຫຼົ່ານີ້ ແລະ ນີ້ແມ່ນປະສົບການທີ່ດີທີ່ສຸດຂອງເຈົ້າ.

# ເບື້ອງຫຼັງແທ້ຈິງຂອງ ພາລະກິດແຫ່ງການເອົາຊະນະ (2)

ພວກເຈົ້າເຄີຍສະແຫວງຫາເພື່ອປົກຄອງດັ່ງກະສັດ ແລະ ໃນປັດຈຸບັນພວກເຈົ້າກໍຍັງບໍ່ໄດ້ປະຖິ້ມສິ່ງນີ້ຢ່າງສິ້ນເຊີງເທື່ອ; ເຈົ້າຍັງປາດຖະໜາທີ່ຈະປົກຄອງດັ່ງກະສັດ, ຍົກສະຫວັນຂຶ້ນ ແລະ ຄໍ້າຊູແຜ່ນດິນໂລກ. ຕອນນີ້ ໃຫ້ພິຈາລະນາຄຳຖາມນີ້: ເຈົ້າມີຄຸນສົມບັດດັ່ງກ່າວຢູ່ບໍ? ເຈົ້າບໍ່ໄດ້ໄຮ້ຄວາມຮູ້ສຶກໂດຍສິ້ນເຊີງບໍ? ເຈົ້າບໍ່ມີເຫດຜົນຫຍັງເລີຍບໍ? ສິ່ງທີ່ພວກເຈົ້າສະແຫວງຫາ ແລະ ອຸທິດຄວາມເອົາໃຈໃສ່ຂອງພວກເຈົ້າແມ່ນມີຄວາມເປັນຈິງຢູ່ບໍ? ພວກເຈົ້າບໍ່ມີແມ່ນແຕ່ຄວາມເປັນມະນຸດປົກກະຕິ, ມັນບໍ່ເປັນຕາເວດທະນາບໍ? ດັ່ງນັ້ນ, ມື້ນີ້ ເຮົາຈຶ່ງເວົ້າແຕ່ກ່ຽວກັບການຖືກເອົາຊະນະ, ການເປັນພະຍານ, ການພັດທະນາຄວາມສາມາດຂອງເຈົ້າ ແລະ ການເຂົ້າສູ່ເສັ້ນທາງຂອງການຖືກເຮັດໃຫ້ສົມບູນ ແລະ ຈະບໍ່ໄດ້ເວົ້າກ່ຽວກັບສິ່ງອື່ນເລີຍ. ບາງຄົນແມ່ນເບື່ອໜ່າຍກັບຄວາມຈິງທີ່ບໍ່ໄດ້ຖືກເຈືອປົນ ແລະ ເມື່ອພວກເຂົາເຫັນມີແຕ່ເວົ້າກ່ຽວກັບຄວາມເປັນມະນຸດທີ່ທຳມະດາ ແລະ ການປັບປຸງຄວາມສາມາດຂອງຜູ້ຄົນ ພວກເຂົາກໍລັງເລໃຈແລ້ວ. ຜູ້ທີ່ບໍ່ຮັກຄວາມຈິງຈະເຮັດໃຫ້ສົມບູນບໍ່ແມ່ນງ່າຍ. ຕາບໃດທີ່ພວກເຈົ້າເຂົ້າສູ່ປັດຈຸບັນ ແລະ ກະທຳຕາມຄວາມປະສົງຂອງພຣະເຈົ້າເທື່ອລະບາດກ້າວ ເຈົ້າຈະສາມາດຖືກກຳຈັດຢູ່ບໍ? ພາຍຫຼັງທີ່ພຣະເຈົ້າໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍໃນປະເທດຈີນແຜ່ນດິນໃຫຍ່ ເຊິ່ງເປັນພາລະກິດທີ່ມີຂອບເຂດຢ່າງໃຫຍ່ຫຼວງດັ່ງກ່າວ ແລະ ພາຍຫຼັງທີ່ພຣະອົງໄດ້ກ່າວພຣະທຳຫຼາຍຂໍ້ ພຣະອົງຈະສາມາດຍົກເລີກກາງທາງໄດ້ບໍ? ພຣະເຈົ້າຈະສາມາດນຳພາຜູ້ຄົນລົງໄປສູ່ຂຸມເລິກຈົນຍັ່ງບໍ່ເຖິງໄດ້ບໍ? ໃນປັດຈຸບັນ ສິ່ງທີ່ສຳຄັນແມ່ນພວກເຈົ້າຕ້ອງຮູ້ຈັກທາດແທ້ຂອງມະນຸດ ແລະ ຕ້ອງຮູ້ຈັກສິ່ງທີ່ພວກເຈົ້າຄວນເຂົ້າສູ່; ພວກເຈົ້າຕ້ອງເວົ້າກ່ຽວກັບການເຂົ້າສູ່ຊີວິດ ແລະ ການປ່ຽນແປງໃນອຸປະນິໄສ, ວິທີທີ່ຈະຖືກເອົາຊະນະຢ່າງແທ້ຈິງ ແລະ ວິທີເຊື່ອຟັງພຣະເຈົ້າຢ່າງທັງໝົດ, ວິທີເປັນພະຍານສຸດທ້າຍໃຫ້ແກ່ພຣະເຈົ້າ ແລະ ວິທີການບັນລຸຄວາມເຊື່ອຟັງຈົນຕາຍ. ເຈົ້າຕ້ອງເອົາໃຈໃສ່ສິ່ງເຫຼົ່ານີ້ ແລະ ສິ່ງທີ່ບໍ່ເປັນຈິງ ຫຼື ບໍ່ສຳຄັນຕ້ອງຖືກປະຖິ້ມ ແລະ ເບິ່ງຂ້າມ. ໃນປັດຈຸບັນ, ເຈົ້າຄວນຮັບຮູ້ເຖິງວິທີທີ່ຈະຖືກເອົາຊະນະ ແລະ ວິທີທີ່ຜູ້ຄົນປະພຶດຕົນຫຼັງຈາກທີ່ພວກເຂົາຖືກເອົາຊະນະ. ເຈົ້າອາດເວົ້າວ່າ ເຈົ້າຖືກເອົາຊະນະ, ແຕ່ເຈົ້າສາມາດເຊື່ອຟັງຈົນຕາຍໄດ້ບໍ? ເຈົ້າຕ້ອງສາມາດຕິດຕາມຈົນເຖິງທີ່ສຸດ ບໍ່ວ່າຈະມີຄວາມຄາດຫວັງ ຫຼື ບໍ່ກໍຕາມ ແລະ ເຈົ້າຕ້ອງບໍ່ສູນເສຍຄວາມເຊື່ອທີ່ມີໃນພຣະເຈົ້າ ບໍ່ວ່າຈະມີສະພາບແວດລ້ອມແບບໃດກໍຕາມ. ໃນທີ່ສຸດ, ເຈົ້າຕ້ອງບັນລຸສອງດ້ານຂອງຄຳພະຍານ: ຄຳພະຍານຂອງໂຢບ ນັ້ນກໍຄືຄວາມເຊື່ອຟັງຈົນຕາຍ; ແລະ ຄຳພະຍານຂອງເປໂຕ ນັ້ນກໍຄືຄວາມຮັກອັນຍິ່ງໃຫຍ່ຕໍ່ພຣະເຈົ້າ. ໃນແງ່ໜຶ່ງ, ເຈົ້າຕ້ອງເປັນຄືໂຢບ: ລາວສູນເສຍຊັບສົມບັດທາງວັດຖຸທັງໝົດ ແລະ ອ້ອມລ້ອມໄປດ້ວຍຄວາມເຈັບປວດຂອງເນື້ອໜັງ ແຕ່ລາວບໍ່ເຄີຍປະຖິ້ມຊື່ຂອງພຣະເຢໂຮວາ. ນີ້ແມ່ນຄຳພະຍານຂອງໂຢບ. ເປໂຕສາມາດຮັກພຣະເຈົ້າຈົນຕາຍ. ເມື່ອລາວຖືກຄຶງໃສ່ໄມ້ກາງແຂນ ແລະ ພົບກັບຄວາມຕາຍ, ລາວກໍຍັງຮັກພຣະເຈົ້າ; ລາວບໍ່ໄດ້ຄິດເຖິງຄວາມຄາດຫວັງຂອງລາວເອງ ຫຼື

ສະແຫວງຫາຄວາມຫວັງອັນສວຍງາມ ຫຼື ຄວາມຄິດທີ່ຫຼາຍເກີນຄວນ ແລະ ລາວສະແຫວງຫາພຽງແຕ່ເພື່ອຮັກພຣະເຈົ້າ ແລະ ເຊື່ອຟັງການຈັດແຈງທັງໝົດຂອງພຣະເຈົ້າເທົ່ານັ້ນ. ສິ່ງດັ່ງກ່າວແມ່ນມາດຕະຖານທີ່ເຈົ້າຕ້ອງບັນລຸກ່ອນເຈົ້າຈະສາມາດຖືກພິຈາລະນາໃຫ້ເປັນພະຍານ, ກ່ອນເຈົ້າຈະກາຍເປັນຄົນທີ່ຖືກເຮັດໃຫ້ສົມບູນພາຍຫຼັງທີ່ຖືກເອົາຊະນະ. ໃນປັດຈຸບັນ ຖ້າຜູ້ຄົນຮູ້ຈັກທາດແທ້ ແລະ ສະຖານະຂອງພວກເຂົາເອງຢ່າງແທ້ຈິງ ພວກເຂົາຍັງຈະສະແຫວງຫາຄວາມຄາດຫວັງ ແລະ ຄວາມຫວັງບໍ? ສິ່ງທີ່ເຈົ້າຄວນຮູ້ກໍຄືສິ່ງນີ້: ບໍ່ວ່າພຣະເຈົ້າຈະເຮັດໃຫ້ຂ້ານ້ອຍສົມບູນ ຫຼື ບໍ່ກໍຕາມ, ຂ້ານ້ອຍຕ້ອງຕິດຕາມພຣະເຈົ້າ; ທຸກສິ່ງທີ່ພຣະອົງປະຕິບັດໃນປັດຈຸບັນນີ້ແມ່ນສິ່ງທີ່ດີ ແລະ ກໍເພື່ອເຫັນແກ່ຂ້ານ້ອຍ ແລະ ເພື່ອວ່າ ອຸປະນິໄສຂອງພວກຂ້ານ້ອຍຈະສາມາດປ່ຽນແປງໄດ້ ແລະ ພວກຂ້ານ້ອຍຈະສາມາດກຳຈັດອິດທິພົນຂອງຊາຕານໃນຕົວເຮົາ, ເຮັດໃຫ້ເຮົາກຳເນີດຢູ່ໃນດິນແດນແຫ່ງຄວາມສົກກະປົກ ແຕ່ກໍສາມາດກຳຈັດຄວາມບໍ່ບໍລິສຸດອອກຈາກຕົວເຮົາໄດ້, ສັ່ນຄວາມສົກກະປົກ ແລະ ອິດທິພົນຂອງຊາຕານອອກ, ປະມັນໄວ້ເບື້ອງຫຼັງ. ແນ່ນອນຢູ່ແລ້ວວ່າ ນີ້ຄືສິ່ງທີ່ຮຽກຮ້ອງຈາກເຈົ້າ, ແຕ່ສຳລັບພຣະເຈົ້າແລ້ວ ມັນແມ່ນເປັນພຽງການເອົາຊະນະ, ຖືກດຳເນີນເພື່ອວ່າຜູ້ຄົນຈະເດັດດ່ຽວເຊື່ອຟັງ ແລະ ສາມາດຍອມປະຕິບັດຕາມການປັ້ນແຕ່ງທັງໝົດຂອງພຣະເຈົ້າ. ດ້ວຍວິທີນີ້ ສິ່ງຕ່າງໆຈຶ່ງຈະຖືກເຮັດໃຫ້ສຳເລັດ. ໃນປັດຈຸບັນ ຄົນສ່ວນໃຫຍ່ແມ່ນໄດ້ຖືກເອົາຊະນະຮຽບຮ້ອຍແລ້ວ ແຕ່ພາຍໃນພວກເຂົາຍັງມີຫຼາຍຢ່າງທີ່ກະບົດ ແລະ ບໍ່ເຊື່ອຟັງ. ວຸດທິພາວະທີ່ແທ້ຈິງຂອງຜູ້ຄົນກໍຍັງຕໍ່າເກີນໄປ ແລະ ພວກເຂົາຈະສາມາດເຕັມໄປດ້ວຍຄວາມຫ້າວຫັນ ຖ້າມີຄວາມຫວັງ ແລະ ຄວາມຄາດຫວັງເທົ່ານັ້ນ; ຫາກປາສະຈາກຄວາມຫວັງ ແລະ ຄວາມຄາດຫວັງ, ພວກເຂົາກໍຈະຄິດລົບ ແລະ ເຖິງກັບຄິດທີ່ຈະຈາກພຣະເຈົ້າໄປ. ຍິ່ງໄປກວ່ານັ້ນ ຜູ້ຄົນບໍ່ມີຄວາມປາດຖະໜາທີ່ຍິ່ງໃຫຍ່ເພື່ອສະແຫວງຫາການດຳລົງຢູ່ຕາມຄວາມເປັນມະນຸດແບບປົກກະຕິ. ນີ້ແມ່ນຍອມຮັບບໍ່ໄດ້. ດ້ວຍເຫດນັ້ນ, ເຮົາຕ້ອງຍັງເວົ້າກ່ຽວກັບການເອົາຊະນະ. ທີ່ຈິງແລ້ວ ການເຮັດໃຫ້ສົມບູນແມ່ນເກີດຂຶ້ນໃນເວລາດຽວກັນກັບການເອົາຊະນະ: ໃນຂະນະທີ່ເຈົ້າຖືກເອົາຊະນະ, ຜົນໄດ້ຮັບທຳອິດຂອງການຖືກເຮັດໃຫ້ສົມບູນກໍຖືກບັນລຸອີກດ້ວຍ. ຖ້າວ່າມີຄວາມແຕກຕ່າງລະຫວ່າງ ການຖືກເອົາຊະນະ ແລະ ການຖືກເຮັດໃຫ້ສົມບູນ, ນັ້ນແມ່ນອີງຕາມລະດັບຂອງການປ່ຽນແປງໃນຜູ້ຄົນ. ການຖືກເອົາຊະນະແມ່ນບາດກ້າວທຳອິດຂອງການຖືກເຮັດໃຫ້ສົມບູນ ແລະ ບໍ່ໄດ້ໝາຍຄວາມວ່າ ພວກເຂົາຖືກເຮັດໃຫ້ສົມບູນຈົນໝົດ ຫຼື ບໍ່ໄດ້ພິສູດວ່າ ພວກເຂົາຖືກຮັບເອົາຢ່າງສົມບູນໂດຍພຣະເຈົ້າ. ພາຍຫຼັງທີ່ຜູ້ຄົນຖືກເອົາຊະນະ, ກໍມີການປ່ຽນແປງບາງຢ່າງໃນອຸປະນິໄສຂອງພວກເຂົາ ແຕ່ການປ່ຽນແປງດັ່ງກ່າວແມ່ນບໍ່ພຽງພໍຫຼາຍຖ້າທຽບໃສ່ຜູ້ຄົນທີ່ຖືກພຣະເຈົ້າຮັບເອົາຢ່າງສົມບູນ. ໃນປັດຈຸບັນ ສິ່ງທີ່ຖືກປະຕິບັດແມ່ນພາລະກິດເບື້ອງຕົ້ນຂອງການເຮັດໃຫ້ຜູ້ຄົນສົມບູນ ນັ້ນກໍຄືການເອົາຊະນະພວກເຂົາ ແລະ ຖ້າເຈົ້າບໍ່ສາມາດຖືກເອົາຊະນະໄດ້, ແລ້ວເຈົ້າກໍຈະບໍ່ມີວິທີທາງໃນການເຮັດໃຫ້ສົມບູນ ແລະ ຖືກພຣະເຈົ້າຮັບເອົາຢ່າງສົມບູນ. ເຈົ້າພຽງຈະໄດ້ຮັບພຣະທຳບາງຂໍ້ກ່ຽວກັບການຂ້ຽນຕີ ແລະ ການພິພາກສາ ແຕ່ສິ່ງເຫຼົ່ານັ້ນຈະບໍ່ສາມາດປ່ຽນແປງຫົວໃຈຂອງເຈົ້າໄດ້ຢ່າງສົມບູນ. ສະນັ້ນ ເຈົ້າຈະເປັນໜຶ່ງໃນຄົນເຫຼົ່ານັ້ນທີ່ຖືກກຳຈັດ; ມັນຈະ

ບໍ່ແຕກຕ່າງຈາກການແນມເບິ່ງພາເຂົ້າທີ່ເຕັມໄປດ້ວຍອາຫານຫຼູຫຼາຢູ່ເທິງໂຕະ ແຕ່ບໍ່ໄດ້ກິນມັນ. ນັ້ນບໍ່ແມ່ນສາກທີ່ເປັນຕາເສົ້າໃຈສຳລັບເຈົ້າບໍ? ແລ້ວສະນັ້ນ ເຈົ້າຕ້ອງສະແຫວງຫາການປ່ຽນແປງ: ບໍ່ວ່າມັນຈະເປັນການຖືກເອົາຊະນະ ຫຼື ການຖືກເຮັດໃຫ້ສົມບູນກໍຕາມ, ທັງສອງຢ່າງແມ່ນກ່ຽວພັນຢູ່ບ່ອນວ່າມີການປ່ຽນແປງໃນຕົວເຈົ້າ ຫຼື ບໍ່ ແລະ ເຈົ້າເຊື່ອຟັງ ຫຼື ບໍ່ ແລະ ສິ່ງນີ້ຈະກຳນົດວ່າ ເຈົ້າສາມາດຖືກຮັບເອົາໂດຍພຣະເຈົ້າ ຫຼື ບໍ່. ຈົ່ງຮູ້ໄວ້ວ່າ "ການຖືກເອົາຊະນະ" ແລະ "ການຖືກເຮັດໃຫ້ສົມບູນ" ແມ່ນພຽງອີງຕາມຂອບເຂດຂອງການປ່ຽນແປງ ແລະ ການເຊື່ອຟັງ ພ້ອມທັງຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້ານັ້ນແມ່ນບໍລິສຸດສໍ່າໃດ. ສິ່ງທີ່ຈຳເປັນໃນປັດຈຸບັນກໍຄື ການທີ່ເຈົ້າສາມາດຖືກເຮັດໃຫ້ສົມບູນຢ່າງແທ້ຈິງ ແຕ່ໃນເບື້ອງຕົ້ນ ເຈົ້າຕ້ອງຖືກເອົາຊະນະກ່ອນ, ເຈົ້າຕ້ອງມີຄວາມຮູ້ທີ່ພຽງພໍກ່ຽວກັບການຂ້ຽນຕີ ແລະ ການພິພາກສາຂອງພຣະເຈົ້າ, ຕ້ອງມີຄວາມເຊື່ອໃນການຕິດຕາມ ແລະ ເປັນຄົນໜຶ່ງທີ່ສະແຫວງຫາການປ່ຽນແປງ ແລະ ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ. ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະກາຍເປັນຄົນທີ່ສະແຫວງຫາເພື່ອຖືກເຮັດໃຫ້ສົມບູນ. ພວກເຈົ້າຄວນເຂົ້າໃຈວ່າ ໃນໄລຍະຂອງການຖືກເຮັດໃຫ້ສົມບູນ ພວກເຈົ້າຈະຖືກເອົາຊະນະ ແລະ ໃນໄລຍະຂອງການຖືກເອົາຊະນະ ພວກເຈົ້າຈະຖືກເຮັດໃຫ້ສົມບູນ. ໃນປັດຈຸບັນ ເຈົ້າສາມາດສະແຫວງຫາເພື່ອຖືກເຮັດໃຫ້ສົມບູນ ຫຼື ສະແຫວງຫາການປ່ຽນແປງໃນຄວາມເປັນມະນຸດທາງພາຍນອກຂອງເຈົ້າ ແລະ ການປັບປຸງຄວາມສາມາດຂອງເຈົ້າ ແຕ່ຕາມຫຼັກການທີ່ສຳຄັນກໍຄື ເຈົ້າຈະສາມາດເຂົ້າໃຈວ່າ ທຸກສິ່ງທີ່ພຣະເຈົ້າກະທຳໃນປັດຈຸບັນແມ່ນມີຄວາມໝາຍ ແລະ ມີຜົນປະໂຫຍດ: ມັນເຮັດໃຫ້ເຈົ້າທີ່ເກີດໃນດິນແດນແຫ່ງສິ່ງສົກກະປົກສາມາດຫຼົບໜີຈາກຄວາມສົກກະປົກ ແລະ ສັ່ນຖິ້ມສິ່ງນັ້ນ, ມັນເຮັດໃຫ້ເຈົ້າສາມາດເອົາຊະນະອິດທິພົນຂອງຊາຕານ ແລະ ປະຖິ້ມອິດທິພົນມືດຂອງຊາຕານ. ໂດຍການເອົາໃຈໃສ່ກັບສິ່ງເຫຼົ່ານີ້ ເຈົ້າຈະຖືກປົກປ້ອງໃນດິນແດນແຫ່ງຄວາມສົກກະປົກນີ້. ໃນທີ່ສຸດ, ເຈົ້າຈະຖືກຂໍໃຫ້ເປັນພະຍານຫຍັງ? ເຈົ້າເກີດໃນດິນແດນແຫ່ງຄວາມສົກກະປົກ ແຕ່ກໍສາມາດ, ບໍ່ເຈືອປົນດ້ວຍຄວາມສົກກະປົກອີກຄັ້ງ, ດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ ແຕ່ເອົາຕົວເອງອອກຈາກອິດທິພົນຂອງຊາຕານ ແລະ ບໍ່ຖືກຄອບງຳ ຫຼື ຂົ່ມຂູ່ໂດຍຊາຕານ ແລະ ດຳລົງຊີວິດໃນມືຂອງອົງຊົງລິດທານຸພາບສູງສຸດ. ນີ້ແມ່ນການເປັນພະຍານ ແລະ ຫຼັກຖານຂອງໄຊຊະນະໃນການຕໍ່ສູ້ກັບຊາຕານ. ເຈົ້າສາມາດປະຖິ້ມຊາຕານ, ເຈົ້າບໍ່ເປີດເຜີຍອຸປະນິໄສແບບຊາຕານໃນສິ່ງທີ່ເຈົ້າດຳລົງຢູ່ອີກຕໍ່ໄປ, ແຕ່ກົງກັນຂ້າມແມ່ນດຳລົງຊີວິດຕາມສິ່ງທີ່ພຣະເຈົ້າຕ້ອງການໃຫ້ມະນຸດບັນລຸເມື່ອພຣະອົງສ້າງມະນຸດຂຶ້ນມາ: ຄວາມເປັນມະນຸດປົກກະຕິ, ການຮູ້ສຶກທີ່ປົກກະຕິ, ການເຂົ້າໃຈທີ່ປົກກະຕິ, ການຕັ້ງໃຈແບບປົກກະຕິເພື່ອຮັກພຣະເຈົ້າ ແລະ ຄວາມຈົງຮັກພັກດີຕໍ່ພຣະເຈົ້າ. ສິ່ງດັ່ງກ່າວແມ່ນຄຳພະຍານທີ່ເກີດຂຶ້ນໂດຍສິ່ງຖືກສ້າງຂອງພຣະເຈົ້າ. ເຈົ້າເວົ້າວ່າ "ພວກຂ້ານ້ອຍເກີດໃນດິນແດນແຫ່ງຄວາມສົກກະປົກ ແຕ່ຍ້ອນການປົກປ້ອງຂອງພຣະເຈົ້າ, ຍ້ອນການເປັນຜູ້ນຳຂອງພຣະອົງ ແລະ ຍ້ອນພຣະອົງໄດ້ເອົາຊະນະພວກຂ້ານ້ອຍ, ພວກຂ້ານ້ອຍຈຶ່ງໄດ້ກຳຈັດອິດທິພົນຂອງຊາຕານອອກຈາກຕົວເອງ. ການທີ່ພວກຂ້ານ້ອຍສາມາດເຊື່ອຟັງໃນປັດຈຸບັນແມ່ນເປັນຜົນມາຈາກການຖືກພຣະເຈົ້າເອົາຊະນະອີກດ້ວຍ ແລະ ມັນບໍ່ແມ່ນ

ຍ້ອນວ່າ ພວກຂ້ານ້ອຍດີ ຫຼື ຍ້ອນວ່າ ພວກຂ້ານ້ອຍຮັກພຣະເຈົ້າໂດຍທຳມະຊາດ. ມັນເປັນຍ້ອນວ່າ ພຣະເຈົ້າໄດ້ເລືອກພວກຂ້ານ້ອຍ ແລະ ກຳນົດພວກຂ້ານ້ອຍໄວ້ລ່ວງໜ້າ, ພວກຂ້ານ້ອຍຈຶ່ງຖືກເອົາຊະນະໃນປັດຈຸບັນ, ສາມາດເປັນພະຍານໃຫ້ແກ່ພຣະອົງ ແລະ ສາມາດຮັບໃຊ້ພຣະອົງ; ພ້ອມນີ້ ມັນເປັນຍ້ອນວ່າ ພຣະອົງໄດ້ເລືອກພວກຂ້ານ້ອຍ ແລະ ປົກປ້ອງພວກຂ້ານ້ອຍ, ພວກຂ້ານ້ອຍຈຶ່ງຖືກຊ່ວຍໃຫ້ລອດພົ້ນ ແລະ ລອດພົ້ນອອກຈາກອຳນາດຂອງຊາຕານ ແລະ ສາມາດປະຖິ້ມຄວາມສົກກະປົກ ແລະ ຖືກເຮັດໃຫ້ບໍລິສຸດໃນປະເທດແຫ່ງມັງກອນແດງທີ່ຍິ່ງໃຫຍ່". ນອກຈາກນັ້ນ, ສິ່ງທີ່ເຈົ້າດຳລົງຢູ່ພາຍນອກຈະສະແດງວ່າເຈົ້າມີຄວາມເປັນມະນຸດແບບປົກກະຕິ, ມີເຫດຜົນໃນສິ່ງທີ່ເຈົ້າເວົ້າ ແລະ ເຈົ້າດຳລົງຊີວິດຕາມລັກສະນະຂອງບຸກຄົນທຳມະດາ. ເວລາຄົນອື່ນເຫັນເຈົ້າ ເຈົ້າກໍບໍ່ຄວນເຮັດໃຫ້ພວກເຂົາເວົ້າວ່າ "ນີ້ບໍ່ແມ່ນພາບລັກຂອງມັງກອນແດງທີ່ຍິ່ງໃຫຍ່ບໍ?" ການປະພຶດຂອງບັນດາເອື້ອຍນ້ອງແມ່ນບໍ່ເໝາະສົມກັບເອື້ອຍນ້ອງ, ການປະພຶດຂອງອ້າຍນ້ອງກໍບໍ່ເໝາະສົມກັບອ້າຍນ້ອງ ແລະ ເຈົ້າບໍ່ມີຄຸນສົມບັດຂອງໄພ່ພົນເລີຍ. ຫຼັງຈາກນັ້ນ ຜູ້ຄົນກໍຈະເວົ້າວ່າ "ສົມຜົນພຣະເຈົ້າຈຶ່ງເວົ້າວ່າ ພວກເຂົາແມ່ນເຊື້ອສາຍຂອງໂມອາບ, ພຣະອົງເວົ້າຖືກທີ່ສຸດ!" ຖ້າຜູ້ຄົນເບິ່ງພວກເຈົ້າ ແລະ ເວົ້າວ່າ "ເຖິງພຣະເຈົ້າຈະເວົ້າວ່າ ພວກເຈົ້າແມ່ນເຊື້ອສາຍຂອງໂມອາບ, ສິ່ງທີ່ເຈົ້າດຳລົງຕາມກໍໄດ້ພິສູດແລ້ວວ່າ ເຈົ້າໄດ້ປະຖິ້ມອິດທິພົນຂອງຊາຕານ; ເຖິງວ່າສິ່ງເຫຼົ່ານັ້ນຍັງມີຢູ່ໃນຕົວເຈົ້າ, ເຈົ້າກໍສາມາດຫັນຫຼັງຂອງພວກເຈົ້າໃສ່ພວກມັນໄດ້, ນີ້ກໍສະແດງວ່າ ພວກເຈົ້າຖືກເອົາຊະນະຢ່າງສົມບູນ", ພວກເຈົ້າ ຜູ້ທີ່ຖືກເອົາຊະນະ ແລະ ຖືກຊ່ວຍໃຫ້ລອດພົ້ນຈະເວົ້າວ່າ "ມັນແມ່ນຄວາມຈິງທີ່ພວກຂ້ານ້ອຍແມ່ນເຊື້ອສາຍຂອງໂມອາບ ແຕ່ພວກຂ້ານ້ອຍກໍຖືກພຣະເຈົ້າຊ່ວຍໃຫ້ລອດພົ້ນ ແລະ ເຖິງວ່າເຊື້ອສາຍຂອງໂມອາບໃນອະດີດຈະເຄີຍຖືກປະຖິ້ມ ແລະ ຖືກສາບແຊ່ງ ແລະ ຖືກເນລະເທດໂດຍປະຊາຊົນຂອງອິດສະຣາເອນໄປຍັງຊົນຕ່າງຊາດ, ໃນປັດຈຸບັນ ພຣະເຈົ້າໄດ້ຊ່ວຍໃຫ້ພວກຂ້ານ້ອຍລອດພົ້ນ. ມັນແມ່ນຄວາມຈິງທີ່ພວກຂ້ານ້ອຍແມ່ນຄົນທີ່ເສື່ອມຊາມທີ່ສຸດໃນບັນດາຜູ້ຄົນທັງປວງ, ນີ້ແມ່ນບັນຊາໂດຍພຣະເຈົ້າ, ນີ້ແມ່ນຄວາມຈິງ ແລະ ທຸກຄົນບໍ່ສາມາດປະຕິເສດສິ່ງນີ້ໄດ້. ແຕ່ໃນປັດຈຸບັນ ພວກຂ້ານ້ອຍໄດ້ຫຼົບໜີອອກຈາກອິດທິພົນນັ້ນແລ້ວ. ພວກຂ້ານ້ອຍກຽດຊັງບັນພະບຸລຸດຂອງພວກຂ້ານ້ອຍ, ພວກຂ້ານ້ອຍເຕັມໃຈທີ່ຈະຫັນຫຼັງໃຫ້ແກ່ບັນພະບຸລຸດຂອງພວກຂ້ານ້ອຍ, ປະຖິ້ມພວກເຂົາຢ່າງສິ້ນເຊີງ ແລະ ເຊື່ອຟັງການຈັດແຈງທັງໝົດຂອງພຣະເຈົ້າ, ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ບັນລຸສິ່ງທີ່ພຣະອົງຮຽກຮ້ອງຈາກພວກຂ້ານ້ອຍ ແລະ ບັນລຸຄວາມເພິ່ງພໍໃຈຕາມຄວາມປະສົງຂອງພຣະເຈົ້າ. ໂມອາບໄດ້ທໍລະຍົດຕໍ່ພຣະເຈົ້າ, ລາວບໍ່ໄດ້ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ພຣະເຈົ້າກໍກຽດຊັງລາວ. ແຕ່ພວກຂ້ານ້ອຍຄວນເອົາໃຈໃສ່ຫົວໃຈຂອງພຣະເຈົ້າ ແລະ ໃນປັດຈຸບັນ ຍ້ອນພວກຂ້ານ້ອຍເຂົ້າໃຈຄວາມປະສົງຂອງພຣະເຈົ້າ ພວກຂ້ານ້ອຍກໍບໍ່ສາມາດທໍລະຍົດພຣະເຈົ້າໄດ້ ແລະ ຕ້ອງປະຖິ້ມບັນພະບຸລຸດເດີມຂອງພວກຂ້ານ້ອຍ!" ທີ່ຜ່ານມາ ເຮົາໄດ້ເວົ້າກ່ຽວກັບການປະຖິ້ມມັງກອນແດງທີ່ຍິ່ງໃຫຍ່ ແລະ ໃນປັດຈຸບັນ ຫຼັກໆແມ່ນການປະຖິ້ມບັນພະບຸລຸດເດີມຂອງຜູ້ຄົນ. ນີ້ແມ່ນການເປັນພະຍານໜຶ່ງແບບຂອງການເອົາຊະນະຜູ້ຄົນ ແລະ ບໍ່ວ່າເຈົ້າຈະເຂົ້າສູ່ເສັ້ນທາງປັດຈຸບັນດ້ວຍວິທີໃດກໍຕາມ, ຄຳພະຍານຂອງເຈົ້າໃນຂະແໜງການນີ້ຕ້ອງບໍ່ຂາດເຂີນ.

ຄວາມສາມາດຂອງຜູ້ຄົນແມ່ນອ່ອນເກີນໄປ, ພວກເຂົາຂາດຄວາມເປັນມະນຸດແບບປົກກະຕິຫຼາຍເກີນໄປ, ປະຕິກິລິຍາຂອງພວກເຂົາຊ້າຫຼາຍເກີນໄປ, ຂີ້ຄ້ານເກີນໄປ, ຄວາມເສື່ອມຊາມຂອງຊາຕານໄດ້ເຮັດໃຫ້ພວກເຂົາຕາຍດ້ານ ແລະ ມີສະຕິປັນຍາທີ່ໂງ່ ແລະ ເຖິງວ່າພວກເຂົາຈະບໍ່ສາມາດປ່ຽນແປງໄດ້ທັງໝົດໃນໜຶ່ງປີ ຫຼື ສອງປີ, ພວກເຂົາກໍຕ້ອງມີຄວາມຕັ້ງໃຈທີ່ຈະຮ່ວມມື. ມັນສາມາດເວົ້າໄດ້ວ່າ ນີ້ແມ່ນຄຳພະຍານຕໍ່ໜ້າຊາຕານເຊັ່ນກັນ. ຄຳພະຍານໃນປັດຈຸບັນແມ່ນຜົນທີ່ຖືກບັນລຸໂດຍພາລະກິດແຫ່ງການເອົາຊະນະໃນປັດຈຸບັນ ພ້ອມດ້ວຍຕົວຢ່າງ ແລະ ແບບຢ່າງສຳລັບຜູ້ຕິດຕາມໃນອະນາຄົດ. ໃນອະນາຄົດ, ມັນຈະແຜ່ຂະຫຍາຍໄປທຸກປະເທດ; ພາລະກິດທີ່ຖືກປະຕິບັດໃນປະເທດຈີນຈະເຜີຍແຜ່ໄປຍັງທຸກປະເທດ. ເຊື້ອສາຍຂອງໂມອາບແມ່ນຜູ້ຄົນທີ່ຕໍ່າຕ້ອຍທີ່ສຸດໃນບັນດາຜູ້ຄົນທັງໝົດໃນໂລກ. ບາງຄົນຖາມວ່າ "ເຊື້ອສາຍຂອງຮາມບໍ່ແມ່ນຄົນທີ່ຕໍ່າຕ້ອຍທີ່ສຸດໃນບັນດາຄົນທັງປວງບໍ?" ຜູ້ສືບຕະກູນຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ເຊື້ອສາຍຂອງຮາມແມ່ນມີຄວາມສຳຄັນເຊິ່ງເປັນຕົວແທນທີ່ແຕກຕ່າງກັນ ແລະ ເຊື້ອສາຍຂອງຮາມກໍເປັນເລື່ອງທີ່ແຕກຕ່າງ: ບໍ່ວ່າພວກເຂົາຈະຖືກສາບແຊ່ງແບບໃດກໍຕາມ, ພວກເຂົາກໍຍັງເປັນເຊື້ອສາຍຂອງໂນອາ; ໃນຂະນະດຽວກັນ, ຕົ້ນກຳເນີດຂອງໂມອາບບໍ່ໄດ້ບໍລິສຸດ: ໂມອາບມາຈາກພຶດຕິກຳທີ່ຜິດສິນທຳ ແລະ ໃນທີ່ນີ້ກໍໄດ້ມີຄວາມແຕກຕ່າງ. ເຖິງວ່າທັງສອງຈະຖືກສາບແຊ່ງ, ສະຖານະຂອງພວກເຂົາແມ່ນບໍ່ຄືກັນ ແລະ ດ້ວຍເຫດນັ້ນ ເຊື້ອສາຍຂອງໂມອາບຈຶ່ງຕໍ່າຕ້ອຍທີ່ສຸດໃນບັນດາຜູ້ຄົນທັງປວງ ແລະ ຈຶ່ງບໍ່ມີຂໍ້ແທ້ຈິງໃດທີ່ຈະເປັນຕາເຊື່ອໄປຫຼາຍກວ່າການເອົາຊະນະຜູ້ຄົນທີ່ຕໍ່າຕ້ອຍທີ່ສຸດໃນບັນດາຜູ້ຄົນທັງປວງ. ພາລະກິດແຫ່ງຍຸກສຸດທ້າຍທຳລາຍກົດລະບຽບທັງໝົດ ແລະ ບໍ່ວ່າເຈົ້າຈະຖືກສາບແຊ່ງ ຫຼື ລົງໂທດກໍຕາມ, ຕາບໃດທີ່ເຈົ້າຊ່ວຍພາລະກິດຂອງເຮົາ ແລະ ເປັນປະໂຫຍດໃຫ້ແກ່ພາລະກິດແຫ່ງການເອົາຊະນະໃນປັດຈຸບັນ ແລະ ບໍ່ວ່າເຈົ້າຈະແມ່ນເຊື້ອສາຍຂອງໂມອາບ ຫຼື ຜູ້ສືບຕະກູນຂອງມັງກອນແດງທີ່ຍິ່ງໃຫຍ່ກໍຕາມ, ຕາບໃດທີ່ເຈົ້າປະຕິບັດໜ້າທີ່ຂອງສິ່ງຖືກສ້າງຂອງພຣະເຈົ້າຕາມຂັ້ນຕອນນີ້ຂອງພາລະກິດ ແລະ ເຮັດໃຫ້ດີທີ່ສຸດເທົ່າທີ່ເຈົ້າຈະສາມາດເຮັດໄດ້, ແລ້ວຜົນທີ່ສົມຄວນໄດ້ຮັບກໍຈະຖືກບັນລຸ. ເຈົ້າແມ່ນຜູ້ສືບຕະກູນຂອງມັງກອນແດງທີ່ຍິ່ງໃຫຍ່ ແລະ ເຈົ້າແມ່ນເຊື້ອສາຍຂອງໂມອາບ; ສະຫຼຸບກໍຄື ຜູ້ທີ່ມີເນື້ອໜັງ ແລະ ເລືອດແມ່ນສິ່ງຖືກສ້າງຂອງພຣະເຈົ້າ ແລະ ຖືກສ້າງໂດຍພຣະຜູ້ສ້າງ. ເຈົ້າແມ່ນສິ່ງຖືກສ້າງຂອງພຣະເຈົ້າ, ເຈົ້າບໍ່ຄວນມີທາງເລືອກໃດໆ ແລະ ນີ້ແມ່ນໜ້າທີ່ຂອງເຈົ້າ. ແນ່ນອນຢູ່ແລ້ວ ໃນປັດຈຸບັນ ພາລະກິດຂອງພຣະຜູ້ສ້າງແມ່ນແນໃສ່ຈັກກະວານທັງປວງ. ບໍ່ວ່າເຈົ້າຈະສືບເຊື້ອສາຍມາຈາກຜູ້ໃດກໍຕາມ, ນອກເໜືອທຸກສິ່ງ ເຈົ້າແມ່ນໜຶ່ງຂອງບັນດາສິ່ງຖືກສ້າງຂອງພຣະເຈົ້າ, ພວກເຈົ້າທີ່ເປັນເຊື້ອສາຍຂອງໂມອາບ ແມ່ນສ່ວນໜຶ່ງຂອງສິ່ງຖືກສ້າງຂອງພຣະເຈົ້າ, ໂດຍມີຄວາມແຕກຕ່າງພຽງ ພວກເຈົ້າມີຄຸນຄ່າທີ່ຕໍ່າກວ່າເທົ່ານັ້ນ. ໃນປັດຈຸບັນ ຍ້ອນພາລະກິດຂອງພຣະເຈົ້າຖືກປະຕິບັດໃນທ່າມກາງສິ່ງຖືກສ້າງ ແລະ ແນໃສ່ຈັກກະວານທັງປວງ, ພຣະຜູ້ສ້າງແມ່ນມີອິດສະຫຼະໃນການເລືອກຜູ້ຄົນ, ເລື່ອງ ຫຼື ສິ່ງຕ່າງໆເພື່ອປະຕິບັດພາລະກິດຂອງພຣະອົງ. ພຣະອົງບໍ່ສົນໃຈວ່າ ເຈົ້າເຄີຍສືບເຊື້ອສາຍມາຈາກຜູ້ໃດ; ຕາບໃດທີ່ເຈົ້າແມ່ນໜຶ່ງໃນສິ່ງຖືກສ້າງຂອງພຣະອົງ ແລະ ຕາບໃດທີ່ເຈົ້າເປັນປະໂຫຍດແກ່ພາລະກິດຂອງພຣະອົງ ນັ້ນກໍຄືພາລະກິດ

ແຫ່ງການເອົາຊະນະ ແລະ ການເປັນພະຍານ ພຣະອົງກໍຈະປະຕິບັດພາລະກິດຂອງພຣະອົງໃນຕົວເຈົ້າ ໂດຍບໍ່ມີການລັງເລໃຈໃດໆ. ສິ່ງນີ້ໄດ້ທຳລາຍແນວຄວາມຄິດດັ່ງເດີມຂອງຜູ້ຄົນ ເຊິ່ງນັ້ນກໍຄື ພຣະເຈົ້າຈະບໍ່ປະຕິບັດພາລະກິດໃນທ່າມກາງຊົນຕ່າງຊາດຈັກເທື່ອ, ໂດຍສະເພາະແມ່ນຜູ້ທີ່ຖືກສາບແຊ່ງ ແລະ ຕໍ່າຕ້ອຍ; ສຳລັບຜູ້ທີ່ຖືກສາບແຊ່ງ, ຄົນຮຸ່ນໃນອະນາຄົດທັງໝົດທີ່ມາຈາກພວກເຂົາກໍຍັງຈະຖືກສາບແຊ່ງຕະຫຼອດການ ໂດຍບໍ່ໄດ້ຮັບໂອກາດແຫ່ງຄວາມລອດພົ້ນໃດໆເລີຍ; ພຣະເຈົ້າຈະບໍ່ລົງມາ ແລະ ປະຕິບັດພາລະກິດໃນດິນແດນຕ່າງຊາດຈັກເທື່ອ ແລະ ຈະບໍ່ຢຽບໃນດິນແດນແຫ່ງຄວາມສົກກະປົກຍ້ອນພຣະອົງບໍລິສຸດ. ແນວຄິດເຫຼົ່ານີ້ທັງໝົດແມ່ນຖືກທຳລາຍລົງໂດຍພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍ. ຈົ່ງຮູ້ໄວ້ວ່າ ພຣະເຈົ້າແມ່ນພຣະເຈົ້າຂອງສິ່ງຖືກສ້າງທັງປວງ, ພຣະອົງມີອຳນາດເໜືອສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງ ແລະ ບໍ່ແມ່ນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ. ດ້ວຍເຫດນັ້ນ, ພາລະກິດໃນປະເທດຈີນຈຶ່ງມີຄວາມສຳຄັນທີ່ສຸດ ແລະ ມັນຈະບໍ່ຖືກແຜ່ຂະຫຍາຍທ່າມກາງປະຊາຊາດທັງປວງບໍ? ຄຳພະຍານທີ່ຍິ່ງໃຫຍ່ຂອງອະນາຄົດຈະບໍ່ຖືກຈຳກັດໃນປະເທດຈີນ; ຖ້າພຣະເຈົ້າມີແຕ່ເອົາຊະນະພວກເຈົ້າເທົ່ານັ້ນ, ພວກມານຮ້າຍຈະເຊື່ອຢູ່ບໍ? ພວກເຂົາບໍ່ເຂົ້າໃຈເຖິງການຖືກເອົາຊະນະ ຫຼື ລິດອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າ ແລະ ມີແຕ່ເມື່ອຄົນທີ່ຖືກເລືອກຂອງພຣະເຈົ້າໃນທົ່ວຈັກກະວານທັງໝົດໄດ້ເຫັນຜົນສຸດທ້າຍຂອງພາລະກິດນີ້ເທົ່ານັ້ນ ສິ່ງຖືກສ້າງທັງປວງຈຶ່ງຈະຖືກເອົາຊະນະ. ບໍ່ມີໃຜທີ່ຫຼ້າຫຼັງ ຫຼື ເສື່ອມຊາມຫຼາຍກວ່າເຊື້ອສາຍຂອງໂມອາບ. ມີແຕ່ຖ້າຜູ້ຄົນເຫຼົ່ານີ້ສາມາດຖືກເອົາຊະນະ ນັ້ນກໍຄື ພວກເຂົາຜູ້ທີ່ເສື່ອມຊາມທີ່ສຸດ, ຜູ້ທີ່ບໍ່ຮັບຮູ້ເຖິງພຣະເຈົ້າ ຫຼື ເຊື່ອວ່າມີພຣະເຈົ້າ ໄດ້ຖືກເອົາຊະນະ ແລະ ຮັບຮູ້ພຣະເຈົ້າດ້ວຍປາກຂອງພວກເຂົາ, ສັນລະເສີນພຣະອົງ ແລະ ສາມາດຮັກພຣະອົງ, ສິ່ງນີ້ຈຶ່ງຈະເປັນຄຳພະຍານແຫ່ງການເອົາຊະນະ. ເຖິງແມ່ນວ່າພວກເຈົ້າຈະບໍ່ແມ່ນເປໂຕ, ພວກເຈົ້າກໍດຳລົງຊີວິດຕາມແບບຢ່າງຂອງເປໂຕ, ພວກເຈົ້າສາມາດມີຄຳພະຍານຂອງເປໂຕ ແລະ ຂອງໂຢບ ແລະ ນີ້ກໍເປັນຄຳພະຍານທີ່ຍິ່ງໃຫຍ່ທີ່ສຸດແລ້ວ. ໃນທີ່ສຸດ ເຈົ້າຈະເວົ້າວ່າ: "ພວກຂ້ານ້ອຍບໍ່ແມ່ນຊາວອິດສະຣາເອນ, ແຕ່ແມ່ນເຊື້ອສາຍຂອງໂມອາບທີ່ຖືກປະຖິ້ມ, ພວກຂ້ານ້ອຍບໍ່ແມ່ນເປໂຕ ຜູ້ທີ່ມີຄວາມສາມາດທີ່ພວກຂ້ານ້ອຍບໍ່ສາມາດມີ ຫຼື ບໍ່ແມ່ນໂຢບ ແລະ ພວກຂ້ານ້ອຍບໍ່ສາມາດແມ່ນແຕ່ຈະໄປປຽບທຽບກັບຄວາມຕັ້ງໃຈຂອງໂປໂລໃນການທົນທຸກເພື່ອພຣະເຈົ້າ ແລະ ອຸທິດຕົນເອງໃຫ້ແກ່ພຣະເຈົ້າ ແລະ ພວກຂ້ານ້ອຍກໍຫຼ້າຫຼັງຫຼາຍ ແລະ ດ້ວຍເຫດນັ້ນ ພວກຂ້ານ້ອຍຈຶ່ງບໍ່ມີຄຸນສົມບັດທີ່ຈະໄດ້ຮັບພອນຂອງພຣະເຈົ້າ. ພຣະເຈົ້າຍັງໄດ້ຍົກພວກຂ້ານ້ອຍຂຶ້ນໃນປັດຈຸບັນ; ສະນັ້ນ ພວກຂ້ານ້ອຍຕ້ອງເຮັດໃຫ້ພຣະເຈົ້າພໍໃຈ ແລະ ເຖິງແມ່ນວ່າ ພວກຂ້ານ້ອຍຈະມີຄວາມສາມາດ ຫຼື ຄຸນສົມບັດທີ່ບໍ່ພຽງພໍ, ພວກຂ້ານ້ອຍກໍເຕັມໃຈທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ, ພວກຂ້ານ້ອຍມີຄວາມຕັ້ງໃຈນີ້. ພວກຂ້ານ້ອຍແມ່ນເຊື້ອສາຍຂອງໂມອາບ ແລະ ພວກຂ້ານ້ອຍຖືກສາບແຊ່ງ. ນີ້ແມ່ນຄຳບັນຊາຂອງພຣະເຈົ້າ ແລະ ພວກຂ້ານ້ອຍກໍບໍ່ສາມາດປ່ຽນແປງມັນໄດ້, ແຕ່ການດຳລົງຊີວິດຂອງພວກຂ້ານ້ອຍ ແລະ ຄວາມຮູ້ຂອງພວກຂ້ານ້ອຍແມ່ນສາມາດປ່ຽນແປງໄດ້ ແລະ ພວກຂ້ານ້ອຍຕັ້ງໃຈທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ". ເມື່ອເຈົ້າມີຄວາມຕັ້ງໃຈນີ້, ມັນຈະພິສູດໃຫ້ເຫັນວ່າ ເຈົ້າໄດ້ເປັນພະຍານໃນການຖືກເອົາຊະນະແລ້ວ.

# ເບື້ອງຫຼັງແທ້ຈິງຂອງ
# ພາລະກິດແຫ່ງການເອົາຊະນະ (3)

ຜົນທີ່ຕັ້ງໃຈເອົາໄວ້ຂອງພາລະກິດແຫ່ງການເອົາຊະນະ ນອກເໜືອສິ່ງອື່ນໃດ ແມ່ນເພື່ອບໍ່ໃຫ້ເນື້ອໜັງຂອງມະນຸດກະບົດອີກຕໍ່ໄປ; ນັ້ນກໍຄື ເພື່ອໃຫ້ຄວາມຄິດຂອງມະນຸດໄດ້ຮັບເອົາຄວາມຮູ້ໃໝ່ກ່ຽວກັບພຣະເຈົ້າ, ເພື່ອໃຫ້ຫົວໃຈຂອງມະນຸດເຊື່ອຟັງພຣະເຈົ້າໂດຍສິ້ນເຊີງ ແລະ ເພື່ອໃຫ້ມະນຸດປາຖະໜາທີ່ຈະເປັນເພື່ອພຣະເຈົ້າ. ຜູ້ຄົນບໍ່ຖືວ່າໄດ້ຖືກເອົາຊະນະ ເມື່ອນິໄສ ຫຼື ເນື້ອໜັງຂອງພວກເຂົາປ່ຽນແປງ; ເມື່ອຄວາມຄິດຂອງມະນຸດ, ສະຕິຂອງມະນຸດ ແລະ ຄວາມຮູ້ສຶກຂອງມະນຸດປ່ຽນແປງ, ເຊິ່ງເວົ້າໄດ້ວ່າ ເມື່ອທ່າທີທາງຈິດໃຈທັງໝົດຂອງເຈົ້າປ່ຽນແປງ, ນັ້ນຈະເປັນເວລາທີ່ເຈົ້າໄດ້ຖືກເອົາຊະນະໂດຍພຣະເຈົ້າ. ເມື່ອເຈົ້າໄດ້ຕັ້ງໃຈທີ່ຈະເຊື່ອຟັງ ແລະ ນໍາໃຊ້ຄວາມຄິດແບບໃໝ່, ເມື່ອເຈົ້າບໍ່ນໍາເອົາແນວຄິດ ຫຼື ເຈດຕະນາໃດໆຂອງເຈົ້າເອງເຂົ້າສູ່ພຣະທໍາ ແລະ ພາລະກິດຂອງພຣະເຈົ້າອີກຕໍ່ໄປ ແລະ ເມື່ອສະໝອງຂອງເຈົ້າສາມາດຄິດຢ່າງປົກກະຕິ, ນັ້ນໝາຍຄວາມວ່າ ເມື່ອເຈົ້າສາມາດທຸ້ມເທຕົວເຈົ້າເອງໃຫ້ກັບພຣະເຈົ້າດ້ວຍຫົວໃຈທັງໝົດຂອງເຈົ້າ, ແລ້ວເຈົ້າກໍເປັນຄົນປະເພດທີ່ຖືກເອົາຊະນະຢ່າງສົມບູນ. ໃນສາສະໜາ, ຫຼາຍຄົນໄດ້ທົນທຸກຢ່າງຫຼວງຫຼາຍຕະຫຼອດຊີວິດຂອງພວກເຂົາ: ພວກເຂົາເອົາຊະນະຮ່າງກາຍຂອງພວກເຂົາ ແລະ ແບກໄມ້ກາງແຂນຂອງພວກເຂົາ ແລະ ພວກເຂົາເຖິງກັບສືບຕໍ່ທົນທຸກ ແລະ ອົດກັ້ນໃນເວລາທີ່ໃກ້ຈະຕາຍ! ບາງຄົນຍັງອົດອາຫານໃນຕອນເຊົ້າກ່ອນພວກເຂົາຈະຕາຍ. ຕະຫຼອດທັງຊີວິດຂອງພວກເຂົາ, ພວກເຂົາປະຕິເສດອາຫານ ແລະ ເຄື່ອງນຸ່ງຫົ່ມທີ່ດີສໍາລັບຕົວພວກເຂົາເອງ, ພຽງແຕ່ໃສ່ໃຈກັບການທົນທຸກຢ່າງດຽວ. ພວກເຂົາສາມາດເອົາຊະນະຮ່າງກາຍຂອງພວກເຂົາ ແລະ ປະຖິ້ມເນື້ອໜັງຂອງພວກເຂົາ. ວິນຍານແຫ່ງການອົດກັ້ນຕໍ່ການທົນທຸກຂອງພວກເຂົາເປັນຕາຍ້ອງຍໍສັນລະເສີນ. ແຕ່ຄວາມຄິດຂອງພວກເຂົາ, ແນວຄິດຂອງພວກເຂົາ, ທ່າທີທາງຈິດໃຈຂອງພວກເຂົາ ແລະ ແນ່ນອນ ທໍາມະຊາດເດີມຂອງພວກເຂົາບໍ່ໄດ້ຖືກຈັດການແມ່ນແຕ່ໜ້ອຍດຽວ. ພວກເຂົາຂາດຄວາມຮູ້ທີ່ແທ້ຈິງກ່ຽວກັບຕົນເອງ. ພາບໃນຄວາມຄິດຂອງພວກເຂົາກ່ຽວກັບພຣະເຈົ້າແມ່ນພາບດັ້ງເດີມຂອງພຣະເຈົ້າທີ່ເລື່ອນລອຍ. ຄວາມຕັ້ງໃຈຂອງພວກເຂົາທີ່ຈະທົນທຸກເພື່ອພຣະເຈົ້າມາຈາກຄວາມກະຕືລືລົ້ນຂອງພວກເຂົາ ແລະ ລັກສະນະຂອງຄວາມເປັນມະນຸດທີ່ດີຂອງພວກເຂົາ. ເຖິງແມ່ນພວກເຂົາເຊື່ອໃນພຣະເຈົ້າ, ພວກເຂົາກໍບໍ່ເຂົ້າໃຈພຣະອົງ ຫຼື ຮູ້ຈັກເຖິງຄວາມປະສົງຂອງພຣະອົງ. ພວກເຂົາພຽງແຕ່ເຮັດວຽກ ແລະ ທົນທຸກເພື່ອພຣະເຈົ້າແບບຕາບອດ. ພວກເຂົາບໍ່ໄດ້ໃຫ້ຄຸນຄ່າຫຍັງກໍ່ຕາມໃນການແຍກແຍະ, ສົນໃຈແຕ່ໜ້ອຍດຽວກັບວິທີທີ່ຈະຮັບປະກັນວ່າການບໍລິການຂອງພວກເຂົາບັນລຸຕາມຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ ແລະ ແຮງໄກທີ່ພວກເຂົາຈະຮູ້ຈັກເຖິງວິທີທີ່ຈະບັນລຸຄວາມຮູ້ກ່ຽວກັບພຣະເຈົ້າ. ພຣະເຈົ້າທີ່ພວກເຂົາຮັບໃຊ້ບໍ່ແມ່ນພຣະເຈົ້າໃນລັກສະນະທໍາມະຊາດຂອງພຣະອົງ, ແຕ່ເປັນພຣະເຈົ້າທີ່ພວກເຂົາຈິນຕະນາການ, ພຣະເຈົ້າທີ່ພວກເຂົາພຽງແຕ່ໄດ້ຍິນ ຫຼື ພວກເຂົາພຽງແຕ່ໄດ້ອ່ານເລື່ອງເລົ່າລືທີ່ຢູ່ໃນບົດຂຽນ. ແລ້ວພວກເຂົາກໍ

ໃຊ້ຈິນຕະນາການທີ່ອຸດົມສົມບູນ ແລະ ຄວາມເຫຼື້ອມໃສໃນສາສະໜາຂອງພວກເຂົາເພື່ອທົນທຸກເພື່ອພຣະເຈົ້າ ແລະ ຮັບເອົາພາລະກິດຂອງພຣະເຈົ້າ. ການຮັບໃຊ້ຂອງພວກເຂົາແມ່ນບໍ່ແນ່ນອນຫຼາຍຈົນເຖິງກັບວ່າໃນພາກປະຕິບັດຕົວຈິງແລ້ວ ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ຈະສາມາດຮັບໃຊ້ຄວາມປະສົງຂອງພຣະເຈົ້າໄດ້ຢ່າງແທ້ຈິງ. ບໍ່ວ່າພວກເຂົາຈະທົນທຸກດ້ວຍຄວາມຍິນດີແບບໃດກໍຕາມ, ທັດສະນະເດີມຂອງພວກເຂົາກ່ຽວກັບການຮັບໃຊ້ ແລະ ພາບໃນຄວາມຄິດຂອງພວກເຂົາກ່ຽວກັບພຣະເຈົ້າກໍຍັງບໍ່ໄດ້ປ່ຽນແປງ, ເພາະພວກເຂົາບໍ່ໄດ້ຜະເຊີນກັບການພິພາກສາ, ການຂ້ຽນຕີ, ການຫຼໍ່ຫຼອມ ແລະ ການເຮັດໃຫ້ສົມບູນຂອງພຣະເຈົ້າ ແລະ ບໍ່ມີຜູ້ໃດນຳພາພວກເຂົາໂດຍໃຊ້ຄວາມຈິງ. ເຖິງແມ່ນພວກເຂົາເຊື່ອໃນພຣະເຢຊູພຣະຜູ້ໄຖ່, ແຕ່ບໍ່ມີຜູ້ໃດໃນບັນດາພວກເຂົາເຄີຍເຫັນພຣະຜູ້ໄຖ່. ພວກເຂົາພຽງແຕ່ຮູ້ຈັກກ່ຽວກັບພຣະອົງຜ່ານທາງເລື່ອງເລົ່າລື ແລະ ຄຳບອກເລົ່າ. ຜົນຕາມມາກໍຄືການຮັບໃຊ້ຂອງພວກເຂົາກໍພຽງແຕ່ເທົ່າກັບການຮັບໃຊ້ຕາມເວນຕາມກຳໂດຍລັບຕາເທົ່ານັ້ນ, ຄືກັບຄົນຕາບອດຮັບໃຊ້ພໍ່ຂອງເຂົາເອງ. ໃນທີ່ສຸດແລ້ວ ແມ່ນຫຍັງຈະສາມາດຖືກບັນລຸໄດ້ໂດຍການຮັບໃຊ້ດັ່ງກ່າວ? ແລ້ວຜູ້ໃດຈະເຫັນດີໃນການຮັບໃຊ້ນັ້ນ? ຕັ້ງແຕ່ຕົ້ນຈົນຈົບ, ການຮັບໃຊ້ຂອງພວກເຂົາຍັງເໝືອນເດີມໂດຍຕະຫຼອດ; ພວກເຂົາພຽງແຕ່ຮັບເອົາບົດຮຽນທີ່ມະນຸດສ້າງຂຶ້ນ ແລະ ອີງການຮັບໃຊ້ຂອງພວກເຂົາໃສ່ທຳມະຊາດຂອງພວກເຂົາ ແລະ ຄວາມມັກຂອງພວກເຂົາເອງເທົ່ານັ້ນ. ສິ່ງນີ້ຈະສາມາດໃຫ້ລາງວັນຫຍັງໄດ້? ແມ່ນແຕ່ເປໂຕ ຜູ້ທີ່ໄດ້ເຫັນພຣະເຢຊູກໍບໍ່ຮູ້ຈັກວິທີຮັບໃຊ້ຕາມຄວາມປະສົງຂອງພຣະເຈົ້າ; ເພິ່ນພຽງແຕ່ຮູ້ຈັກສິ່ງນີ້ໃນເວລາສຸດທ້າຍ, ໃນເວລາທີ່ເພິ່ນເຖົ້າແລ້ວ. ສິ່ງນີ້ບອກຫຍັງກ່ຽວກັບຄົນຕາບອດເຫຼົ່ານັ້ນ ທີ່ບໍ່ໄດ້ຜະເຊີນກັບການຖືກຈັດການ ຫຼື ການຖືກຮານແມ່ນແຕ່ໜ້ອຍດຽວ ແລະ ຄົນທີ່ບໍ່ມີຜູ້ໃດນຳພາພວກເຂົາ? ການຮັບໃຊ້ຂອງຫຼາຍຄົນທ່າມກາງພວກເຈົ້າໃນປັດຈຸບັນບໍ່ໄດ້ເປັນດັ່ງການຮັບໃຊ້ຂອງຄົນຕາບອດເຫຼົ່ານີ້ບໍ? ທຸກຄົນທີ່ບໍ່ໄດ້ຮັບເອົາການພິພາກສາ, ບໍ່ໄດ້ຮັບເອົາການລິຮານ ແລະ ການຈັດການ ແລະ ຜູ້ທີ່ບໍ່ໄດ້ປ່ຽນແປງ, ພວກເຂົາບໍ່ແມ່ນລ້ວນແຕ່ຖືກເອົາຊະນະຢ່າງບໍ່ຄົບຖ້ວນບໍ? ຜູ້ຄົນເຫຼົ່ານັ້ນມີປະໂຫຍດຫຍັງ? ຖ້າຄວາມຄິດຂອງເຈົ້າ, ຄວາມຮູ້ກ່ຽວກັບຊີວິດຂອງເຈົ້າ ແລະ ຄວາມຮູ້ກ່ຽວກັບພຣະເຈົ້າຂອງເຈົ້າບໍ່ໄດ້ສະແດງເຖິງການປ່ຽນແປງໃໝ່ ແລະ ເຈົ້າບໍ່ໄດ້ຮັບເອົາຫຍັງຢ່າງແທ້ຈິງ, ແລ້ວເຈົ້າກໍຈະບໍ່ບັນລຸຫຍັງເປັນພິເສດໃນການຮັບໃຊ້ຂອງເຈົ້າຈັກເທື່ອ! ຫາກປາສະຈາກນິມິດ ແລະ ຄວາມຮູ້ໃໝ່ກ່ຽວກັບພາລະກິດຂອງພຣະເຈົ້າ, ເຈົ້າກໍບໍ່ໄດ້ຖືກເອົາຊະນະ. ແລ້ວວິທີການຕິດຕາມພຣະເຈົ້າຂອງເຈົ້າກໍຈະເປັນຄືກັບຄົນທີ່ທົນທຸກ ແລະ ອົດອາຫານ: ມີຄຸນຄ່າໜ້ອຍດຽວ! ມັນເປັນຍ້ອນວ່າມີຄຳພະຍານເລັກນ້ອຍໃນສິ່ງທີ່ພວກເຂົາເຮັດແທ້ໆ, ເຮົາຈຶ່ງເວົ້າວ່າການຮັບໃຊ້ຂອງພວກເຂົາບໍ່ມີປະໂຫຍດ! ຕະຫຼອດຊີວິດຂອງພວກເຂົາ, ຜູ້ຄົນເຫຼົ່ານັ້ນທົນທຸກ ແລະ ໃຊ້ເວລາໃນຄຸກ; ພວກເຂົາບໍ່ເຄີຍອົດທົນ, ຮັກ ແລະ ພວກເຂົາບໍ່ເຄີຍແບກໄມ້ກາງແຂນ, ພວກເຂົາຖືກໂລກເຍາະເຍີ້ຍ ແລະ ປະຕິເສດ, ພວກເຂົາຜະເຊີນກັບຄວາມລຳບາກທຸກຢ່າງ ແລະ ເຖິງແມ່ນ ພວກເຂົາເຊື່ອຟັງຈົນເຖິງທີ່ສຸດ, ພວກເຂົາກໍຍັງບໍ່ຖືກເອົາຊະນະ ແລະບໍ່ສາມາດເປັນພະຍານເຖິງການຖືກເອົາຊະນະ. ພວກເຂົາໄດ້ທົນທຸກຢ່າງໜັກ, ແຕ່ຂ້າງໃນແລ້ວ

ພວກເຂົາບໍ່ຮູ້ຈັກພຣະເຈົ້າເລີຍ. ຄວາມຄິດເດີມຂອງພວກເຂົາ, ແນວຄິດເດີມ, ການປະຕິບັດທາງສາສະໜາ, ຄວາມຮູ້ທີ່ມະນຸດສ້າງຂຶ້ນ ແລະ ແນວຄິດຂອງມະນຸດແມ່ນບໍ່ໄດ້ຖືກຈັດການ. ບໍ່ມີແມ່ນແຕ່ຄວາມຮູ້ໃໝ່ເລັກນ້ອຍໃນພວກເຂົາ. ຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າແມ່ນບໍ່ຈິງ ຫຼື ຖືກຕ້ອງແມ່ນແຕ່ໜ້ອຍດຽວ. ພວກເຂົາເຂົ້າໃຈຄວາມປະສົງຂອງພຣະເຈົ້າຜິດ. ສິ່ງນີ້ແມ່ນການຮັບໃຊ້ພຣະເຈົ້າບໍ? ບໍ່ວ່າຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າເປັນແນວໃດກໍຕາມໃນອະດີດ, ຖ້າມັນຍັງເໝືອນເດີມໃນປັດຈຸບັນ ແລະ ເຈົ້າສືບຕໍ່ອີງຄວາມຮູ້ກ່ຽວກັບພຣະເຈົ້າຂອງເຈົ້າຕາມແນວຄິດ ແລະ ຄວາມຄິດຂອງເຈົ້າເອງ ບໍ່ວ່າພຣະເຈົ້າເຮັດຫຍັງກໍຕາມ, ໝາຍຄວາມວ່າ ຖ້າເຈົ້າບໍ່ມີຄວາມຮູ້ທີ່ໃໝ່ ແລະ ແທ້ຈິງກ່ຽວກັບພຣະເຈົ້າ ແລະ ຖ້າເຈົ້າລົ້ມເຫຼວທີ່ຈະຮູ້ຈັກລັກສະນະ ແລະ ອຸປະນິໄສທີ່ແທ້ຈິງຂອງພຣະເຈົ້າ, ຖ້າຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າຍັງຖືກນຳພາໂດຍຄວາມຄິດທີ່ເປັນສັກດີນາ ແລະ ງົມງວາຍ ແລະ ຍັງເກີດຈາກຈິນຕະນາການ ແລະ ແນວຄິດຂອງມະນຸດ, ແລ້ວເຈົ້າກໍບໍ່ໄດ້ຖືກເອົາຊະນະ. ພຣະທຳທັງໝົດທີ່ເຮົາກ່າວແກ່ເຈົ້າໃນຕອນນີ້ກໍ່ເພື່ອໃຫ້ເຈົ້າຮູ້ຈັກ, ເພື່ອໃຫ້ຄວາມຮູ້ນີ້ນຳພາເຈົ້າໄປສູ່ຄວາມຮູ້ທີ່ໃໝ່ກວ່າ ແລະ ຖືກຕ້ອງ; ພວກມັນຍັງມີເຈດຕະນາເພື່ອກຳຈັດແນວຄິດເດີມ ແລະ ຄວາມຮູ້ເດີມໆໃນເຈົ້າ, ເພື່ອວ່າເຈົ້າອາດມີຄວາມຮູ້ໃໝ່. ຖ້າເຈົ້າກິນ ແລະ ດື່ມພຣະທຳຂອງເຮົາຢ່າງແທ້ຈິງ, ແລ້ວຄວາມຮູ້ຂອງເຈົ້າກໍຈະປ່ຽນແປງຢ່າງຫຼວງຫຼາຍ. ຕາບໃດທີ່ເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າດ້ວຍຫົວໃຈແຫ່ງການເຊື່ອຟັງ, ແລ້ວທັດສະນະຂອງເຈົ້າກໍຈະກົງກັນຂ້າມ. ຕາບໃດທີ່ເຈົ້າສາມາດຍອມຮັບເອົາການຂ້ຽນຕີຕະຫຼອດ, ຄວາມຄິດເດີມຂອງເຈົ້າກໍຈະປ່ຽນແປງເທື່ອລະໜ້ອຍ. ຕາບໃດທີ່ຄວາມຄິດເດີມຂອງເຈົ້າຖືກແທນດ້ວຍຄວາມຄິດໃໝ່ທັງໝົດ, ການປະຕິບັດຂອງເຈົ້າກໍຈະປ່ຽນແປງຕາມເຊັ່ນກັນ. ໃນລັກສະນະນີ້, ການຮັບໃຊ້ຂອງເຈົ້າຈະຍິ່ງຖືກເປົ້າໄດ້ຫຼາຍຂຶ້ນເລື້ອຍໆ, ສາມາດບັນລຸຕາມຄວາມປະສົງຂອງພຣະເຈົ້າຫຼາຍຂຶ້ນເລື້ອຍໆ. ຖ້າເຈົ້າສາມາດປ່ຽນແປງຊີວິດຂອງເຈົ້າ, ຄວາມຮູ້ຂອງເຈົ້າກ່ຽວກັບຊີວິດມະນຸດ ແລະ ແນວຄິດຫຼາຍຢ່າງຂອງເຈົ້າກ່ຽວກັບພຣະເຈົ້າ, ແລ້ວທຳມະຊາດຂອງເຈົ້າກໍຈະຫາຍໄປເທື່ອລະໜ້ອຍ. ສິ່ງນີ້ ແລະ ປະມານສິ່ງນີ້ຄືຜົນສະທ້ອນ ເມື່ອພຣະເຈົ້າເອົາຊະນະຜູ້ຄົນ, ມັນຄືການປ່ຽນແປງທີ່ເກີດຂຶ້ນໃນຜູ້ຄົນ. ໃນຄວາມເຊື່ອຂອງເຈົ້າໃນພຣະເຈົ້າ ຖ້າທຸກສິ່ງທີ່ເຈົ້າຮູ້ຄືການເອົາຊະນະຮ່າງກາຍຂອງເຈົ້າ ແລະ ການອົດກັ້ນ ແລະ ການທົນທຸກ ແລະ ເຈົ້າບໍ່ຮູ້ວ່ານັ້ນແມ່ນສິ່ງທີ່ຖືກຕ້ອງ ຫຼື ຜິດ, ຍິ່ງໄປກວ່ານັ້ນ ບໍ່ຮູ້ວ່າເຮັດເພື່ອຜູ້ໃດ, ແລ້ວການປະຕິບັດດັ່ງກ່າວຈະນຳໄປສູ່ການປ່ຽນແປງໄດ້ແນວໃດ?

ໃຫ້ເຂົ້າໃຈວ່າ ສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າບໍ່ແມ່ນເພື່ອໃຫ້ພວກເຈົ້າຂົ່ມເນື້ອໜັງຂອງເຈົ້າຄືທາດ ຫຼື ຢຸດສະໝອງຂອງເຈົ້າບໍ່ໃຫ້ມີຄວາມຄິດຕາມອຳເພີໃຈ. ນີ້ບໍ່ແມ່ນເປົ້າໝາຍຂອງພາລະກິດ ຫຼື ພາລະກິດທີ່ຈຳເປັນຕ້ອງຖືກປະຕິບັດໃນຕອນນີ້. ໃນປັດຈຸບັນ, ພວກເຈົ້າຕ້ອງມີຄວາມຮູ້ຈາກດ້ານບວກ ເພື່ອວ່າເຈົ້າຈະປ່ຽນແປງຕົນເອງ. ກິດຈະການທີ່ຈຳເປັນທີ່ສຸດກໍຄືໃຫ້ພວກເຈົ້າປະກອບຕົນເອງດ້ວຍພຣະທຳຂອງພຣະເຈົ້າ, ໝາຍເຖິງປະກອບຕົນເອງຢ່າງຄົບຖ້ວນດ້ວຍຄວາມຈິງ ແລະ ນິມິດຂອງປັດຈຸບັນ ແລະ ຫຼັງຈາກນັ້ນ ກໍດຳເນີນການ ແລະ ນຳສິ່ງເຫຼົ່ານັ້ນເຂົ້າສູ່ການປະຕິບັດ. ນີ້ແມ່ນຄວາມ

ຮັບຜິດຊອບຂອງພວກເຈົ້າ. ເຮົາບໍ່ໄດ້ຂໍໃຫ້ພວກເຈົ້າສະແຫວງຫາ ແລະ ຮັບເອົາແສງສະຫວ່າງໄປຫຼາຍກວ່ານີ້. ໃນປັດຈຸບັນ, ພວກເຈົ້າບໍ່ມີວຸດທິພາວະສຳລັບສິ່ງນັ້ນເທື່ອ. ສິ່ງທີ່ຖືກຮຽກຮ້ອງຈາກພວກເຈົ້າກໍຄືໃຫ້ເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອກິນ ແລະ ດື່ມພຣະທຳຂອງພຣະເຈົ້າ. ພວກເຈົ້າຕ້ອງເຂົ້າໃຈພາລະກິດຂອງພຣະເຈົ້າ ແລະ ຮູ້ຈັກທຳມະຊາດຂອງພວກເຈົ້າ, ທາດແທ້ຂອງພວກເຈົ້າ ແລະ ຊີວິດເກົ່າຂອງພວກເຈົ້າ. ໂດຍສະເພາະແລ້ວ ເຈົ້າຈຳເປັນຕ້ອງຮູ້ຈັກການປະຕິບັດທີ່ຜິດພາດ ແລະ ແປກປະຫຼາດເຫຼົ່ານັ້ນໃນອະດີດ ແລະ ການກະທຳເຫຼົ່ານັ້ນຂອງມະນຸດທີ່ເຈົ້າມີສ່ວນຮ່ວມ. ເພື່ອການປ່ຽນແປງ, ເຈົ້າຕ້ອງເລີ່ມຕົ້ນດ້ວຍການປ່ຽນແປງຄວາມຄິດຂອງເຈົ້າ. ກ່ອນອື່ນ ໃຫ້ແທນຄວາມຄິດເດີມຂອງພວກເຈົ້າດ້ວຍຄວາມຄິດໃໝ່ ແລະ ໃຫ້ຄວາມຄິດໃໝ່ຂອງພວກເຈົ້າປົກຄອງຄຳເວົ້າ ແລະ ການກະທຳຂອງພວກເຈົ້າ ແລະ ຊີວິດຂອງພວກເຈົ້າ. ນີ້ແມ່ນສິ່ງທີ່ຖືກຮຽກຮ້ອງຈາກພວກເຈົ້າແຕ່ລະຄົນໃນປັດຈຸບັນ. ຢ່າປະຕິບັດຢ່າງຕາບອດ ຫຼື ຕິດຕາມຢ່າງຕາບອດ. ເຈົ້າຄວນມີຫຼັກເກນ ແລະ ເປົ້າໝາຍ. ຢ່າຫຼອກລວງຕົນເອງ. ພວກເຈົ້າຄວນຮູ້ວ່າຄວາມເຊື່ອຂອງພວກເຈົ້າໃນພຣະເຈົ້າແມ່ນເພື່ອຫຍັງແທ້, ແມ່ນຫຍັງທີ່ຈະໄດ້ຮັບຈາກມັນ ແລະ ພວກເຈົ້າຄວນເຂົ້າສູ່ສິ່ງໃດໃນຕອນນີ້. ມັນຈຳເປັນທີ່ສຸດທີ່ພວກເຈົ້າຕ້ອງຮູ້ຈັກທຸກສິ່ງນີ້.

ສິ່ງທີ່ພວກເຈົ້າຄວນເຂົ້າສູ່ໃນປັດຈຸບັນແມ່ນການຍົກຊີວິດຂອງພວກເຈົ້າຂຶ້ນ ແລະ ຍົກລະດັບຄວາມສາມາດຂອງພວກເຈົ້າ. ນອກຈາກນັ້ນ ເຈົ້າຈຳເປັນຕ້ອງປ່ຽນແປງທັດສະນະເດີມເຫຼົ່ານັ້ນຈາກອະດີດຂອງພວກເຈົ້າ, ປ່ຽນແປງຄວາມຄິດຂອງພວກເຈົ້າ ແລະ ປ່ຽນແປງແນວຄິດຂອງພວກເຈົ້າ. ທັງຊີວິດຂອງພວກເຈົ້າຕ້ອງການໆຟື້ນຟູ. ເມື່ອຄວາມຮູ້ຂອງເຈົ້າກ່ຽວກັບການກະທຳຂອງພຣະເຈົ້າປ່ຽນແປງ, ເມື່ອເຈົ້າມີຄວາມຮູ້ໃໝ່ກ່ຽວກັບຄວາມຈິງໃນທຸກສິ່ງທີ່ພຣະເຈົ້າເວົ້າ ແລະ ເມື່ອຄວາມຮູ້ທີ່ຢູ່ພາຍໃນຕົວເຈົ້າຖືກຍົກຂຶ້ນ, ແລ້ວຊີວິດຂອງເຈົ້າກໍຈະດີຂຶ້ນ. ທຸກສິ່ງທີ່ຜູ້ຄົນເຮັດ ແລະ ເວົ້າໃນຕອນນີ້ແມ່ນພາກປະຕິບັດ. ສິ່ງເຫຼົ່ານີ້ບໍ່ແມ່ນຫຼັກຄຳສອນ, ແຕ່ກົງກັນຂ້າມ ພວກມັນແມ່ນສິ່ງທີ່ຜູ້ຄົນຕ້ອງການສຳລັບຊີວິດຂອງພວກເຂົາ ແລະ ສິ່ງທີ່ພວກເຂົາຄວນມີ. ນີ້ຄືການປ່ຽນແປງທີ່ເກີດຂຶ້ນໃນຜູ້ຄົນໃນລະຫວ່າງພາລະກິດແຫ່ງການເອົາຊະນະ, ການປ່ຽນແປງທີ່ຜູ້ຄົນຄວນຜະເຊີນ ແລະ ມັນເປັນຜົນສະທ້ອນຫຼັງຈາກທີ່ພວກເຂົາຖືກເອົາຊະນະ. ເມື່ອເຈົ້າໄດ້ປ່ຽນແປງຄວາມຄິດຂອງເຈົ້າ, ນຳໃຊ້ທ່າທີໃນຄວາມຄິດແບບໃໝ່, ລົບລ້າງແນວຄິດ ແລະ ເຈດຕະນາຂອງເຈົ້າ ແລະ ເຫດຜົນຕາມຕັກກະໃນອະດີດຂອງເຈົ້າ, ປະຖິ້ມສິ່ງຕ່າງໆທີ່ຝັງເລິກຢູ່ພາຍໃນຕົວເຈົ້າ ແລະ ຮັບເອົາຄວາມຮູ້ໃໝ່ກ່ຽວກັບຄວາມເຊື່ອໃນພຣະເຈົ້າ, ແລ້ວຄຳພະຍານທີ່ເຈົ້າໃຫ້ກໍຈະຖືກຍົກຂຶ້ນ ແລະ ການເປັນຢູ່ທັງໝົດຂອງເຈົ້າກໍຈະຖືກປ່ຽນແປງຢ່າງແທ້ຈິງ. ທຸກສິ່ງເຫຼົ່ານີ້ເປັນສິ່ງທີ່ແທ້ຈິງທີ່ສຸດ, ເປັນຈິງທີ່ສຸດ ແລະ ເປັນພື້ນຖານທີ່ສຸດສຳລັບຫຼາຍສິ່ງ, ເປັນສິ່ງທີ່ຜູ້ຄົນບໍ່ສາມາດເຂົ້າໃຈໃນອະດີດ ແລະ ສິ່ງທີ່ພວກເຂົາບໍ່ສາມາດເຂົ້າຮ່ວມໄດ້. ພວກມັນແມ່ນພາລະກິດທີ່ແທ້ຈິງຂອງພຣະວິນຍານ. ໃນອະດີດ ເຈົ້າເຂົ້າໃຈພຣະຄຳພີແນວໃດແທ້? ປຽບທຽບສິ່ງນີ້ກັບປັດຈຸບັນ ແລ້ວເຈົ້າກໍ່ຈະຮູ້. ໃນອະດີດ ທາງດ້ານຈິດໃຈ ເຈົ້າຍົກໂມເຊ, ເປໂຕ, ໂປໂລ ຫຼື ຄຳເວົ້າ ແລະ ທັດສະນະອື່ນໆໃນພຣະຄຳພີຂຶ້ນ ແລະ ວາງພວກເຂົາໄວ້ເທິງ

ແທ່ນບູຊາ. ບັດນີ້ ຖ້າເຈົ້າຖືກຮຽກຮ້ອງໃຫ້ວາງພຣະຄຳພີເທິງແທ່ນບູຊາ, ເຈົ້າຈະເຮັດບໍ? ເຈົ້າຈະເຫັນວ່າ ພຣະຄຳພີມີການບັນທຶກຫຼາຍຢ່າງທີ່ຂຽນຂຶ້ນໂດຍມະນຸດ ແລະ ພຣະຄຳພີເປັນພຽງການບັນທຶກຂອງມະນຸດກ່ຽວກັບສອງຂັ້ນຕອນຂອງພາລະກິດຂອງພຣະເຈົ້າ. ມັນຄືໜັງສືປະຫວັດສາດ. ນີ້ບໍ່ໄດ້ໝາຍຄວາມວ່າຄວາມຮູ້ຂອງເຈົ້າກ່ຽວກັບພຣະຄຳພີປ່ຽນແປງແລ້ວບໍ? ຖ້າເຈົ້າຫຼຽວເບິ່ງປະຫວັດວົງຕະກູນຂອງພຣະເຢຊູທີ່ມີໃນພຣະກິດຕິຄຸນມັດທາຍໃນປັດຈຸບັນ, ເຈົ້າຈະເວົ້າວ່າ "ປະຫວັດວົງຕະກູນຂອງພຣະເຢຊູບໍ? ໄຮ້ສາລະ! ນີ້ແມ່ນປະຫວັດວົງຕະກູນຂອງໂຢເຊບ, ບໍ່ແມ່ນຂອງພຣະເຢຊູ. ບໍ່ມີຄວາມສຳພັນລະຫວ່າງພຣະເຢຊູ ແລະ ໂຢເຊບ". ເມື່ອເຈົ້າຫຼຽວເບິ່ງພຣະຄຳພີໃນຕອນນີ້, ຄວາມຮູ້ຂອງເຈົ້າກ່ຽວກັບພຣະຄຳພີກໍແຕກຕ່າງ, ໝາຍຄວາມວ່າ ທັດສະນະຂອງເຈົ້າໄດ້ປ່ຽນໄປ ແລະ ເຈົ້ານຳເອົາຄວາມຮູ້ໃນລະດັບທີ່ສູງຂຶ້ນເຂົ້າໃນພຣະຄຳພີ ເຊິ່ງສູງກວ່າຜູ້ຊ່ຽວຊານອາວຸໂສດ້ານສາສະໜາ. ຖ້າບາງຄົນເວົ້າວ່າມີບາງສິ່ງທີ່ຖືກຕ້ອງກ່ຽວກັບປະຫວັດວົງຕະກູນນີ້, ເຈົ້າກໍຈະຕອບກັບວ່າ "ແມ່ນຫຍັງທີ່ຖືກຕ້ອງກ່ຽວກັບປະຫວັດວົງຕະກູນນີ້? ເລີ່ມຕົ້ນ ແລະ ອະທິບາຍເລີຍ. ພຣະເຢຊູ ແລະ ໂຢເຊບບໍ່ໄດ້ກ່ຽວຂ້ອງກັນ. ເຈົ້າບໍ່ຮູ້ເຖິງສິ່ງນັ້ນບໍ? ພຣະເຢຊູສາມາດມີປະຫວັດວົງຕະກູນບໍ? ພຣະເຢຊູຈະມີບັນພະບຸລຸດໄດ້ແນວໃດ? ພຣະອົງຈະສາມາດເປັນເຊື້ອສາຍຂອງມະນຸດໄດ້ແນວໃດ? ເນື້ອໜັງຂອງພຣະອົງເກີດມາຈາກມາຣີອາ; ພຣະວິນຍານຂອງພຣະອົງແມ່ນພຣະວິນຍານຂອງພຣະເຈົ້າ, ບໍ່ແມ່ນວິນຍານຂອງມະນຸດ. ພຣະເຢຊູເປັນພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ, ແລ້ວພຣະອົງຈະມີປະຫວັດວົງຕະກູນໄດ້ແນວໃດ? ໃນຂະນະທີ່ຢູ່ເທິງແຜ່ນດິນໂລກ, ພຣະອົງບໍ່ແມ່ນສະມາຊິກຂອງມະນຸດຊາດ, ແລ້ວພຣະອົງຈະມີປະຫວັດວົງຕະກູນໄດ້ແນວໃດ?" ເມື່ອເຈົ້າວິເຄາະປະຫວັດວົງຕະກູນ ແລະ ອະທິບາຍຄວາມຈິງພາຍໃນຢ່າງຊັດເຈນ, ແບ່ງປັນໃນສິ່ງທີ່ເຈົ້າເຂົ້າໃຈ, ບຸກຄົນນັ້ນກໍຈະເວົ້າບໍ່ອອກ. ບາງຄົນຈະອ້າງອີງເຖິງພຣະຄຳພີ ແລະ ຖາມເຈົ້າວ່າ "ພຣະເຢຊູມີປະຫວັດວົງຕະກູນ. ພຣະເຈົ້າຂອງເຈົ້າໃນປັດຈຸບັນມີປະຫວັດວົງຕະກູນບໍ?" ແລ້ວເຈົ້າກໍຈະບອກພວກເຂົາອີງຕາມຄວາມຮູ້ຂອງເຈົ້າ ເຊິ່ງເປັນຈິງທີ່ສຸດ ແລະ ໃນລັກສະນະນີ້ ຄວາມຮູ້ຂອງເຈົ້າກໍຈະໄດ້ຮັບຜົນ. ໃນຄວາມຈິງແລ້ວ, ພຣະເຢຊູບໍ່ກ່ຽວຂ້ອງກັບໂຢເຊບ, ແຮງໄກທີ່ຈະກ່ຽວຂ້ອງກັບອັບຣາຮາມ; ພຣະອົງພຽງແຕ່ເກີດໃນອິດສະຣາເອນ. ເຖິງຢ່າງໃດກໍຕາມ ພຣະເຈົ້າບໍ່ແມ່ນຊາວອິດສະຣາເອນ ຫຼື ເຊື້ອສາຍຂອງຊາວອິດສະຣາເອນ. ການເກີດໃນອິດສະຣາເອນບໍ່ໄດ້ໝາຍຄວາມວ່າ ພຣະເຈົ້າເປັນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ. ມັນເພື່ອພາລະກິດຂອງພຣະອົງເທົ່ານັ້ນ, ພຣະອົງຈຶ່ງປະຕິບັດພາລະກິດແຫ່ງການບັງເກີດເປັນມະນຸດ. ພຣະເຈົ້າເປັນພຣະເຈົ້າຂອງທຸກສັບພະສິ່ງທົ່ວຈັກກະວານ. ພຣະອົງພຽງແຕ່ປະຕິບັດໜຶ່ງຂັ້ນຕອນຂອງພາລະກິດຂອງພຣະອົງໃນອິດສະຣາເອນກ່ອນ, ຫຼັງຈາກນັ້ນ ພຣະອົງກໍເລີ່ມຕົ້ນປະຕິບັດພາລະກິດທ່າມກາງຊາວຕ່າງຊາດ. ເຖິງຢ່າງໃດກໍຕາມ ຜູ້ຄົນກໍຖືວ່າພຣະເຢຊູເປັນພຣະເຈົ້າຂອງຊາວອິດສະຣາເອນ ແລະ ຍິ່ງໄປກວ່ານັ້ນແມ່ນວາງພຣະອົງທ່າມກາງຊາວອິດສະຣາເອນ ແລະ ທ່າມກາງເຊື້ອສາຍຂອງເດວິດ. ພຣະຄຳພີກ່າວວ່າ ໃນທີ່ສຸດແລ້ວ ນາມຂອງພຣະເຢໂຮວາຈະຍິ່ງໃຫຍ່ທ່າມກາງຊາວຕ່າງຊາດ, ໝາຍຄວາມວ່າ ພຣະເຈົ້າຈະປະຕິບັດພາລະກິດທ່າມກາງຊາວຕ່າງຊາດໃນລະຫວ່າງຍຸກສຸດທ້າຍ.

ການທີ່ພຣະອົງບັງເກີດໃນຢູດາຍບໍ່ໄດ້ບົ່ງບອກວ່າພຣະເຈົ້າຮັກແຕ່ຊາວຢິວເທົ່ານັ້ນ. ສິ່ງນັ້ນເກີດຂຶ້ນພຽງແຕ່ຍ້ອນພາລະກິດຮຽກຮ້ອງໃຫ້ມັນເກີດຂຶ້ນ; ມັນບໍ່ແມ່ນຄວາມຈິງທີ່ພຣະເຈົ້າພຽງແຕ່ສາມາດບັງເກີດໄດ້ໃນອິດສະຣາເອນເທົ່ານັ້ນ (ຍ້ອນຊາວອິດສະຣາເອນເປັນຄົນທີ່ຖືກເລືອກຂອງພຣະອົງ). ແລ້ວຄົນທີ່ຖືກເລືອກຂອງພຣະອົງບໍ່ໄດ້ພົບຢູ່ທ່າມກາງຊາວຕ່າງຊາດເຊັ່ນກັນບໍ? ມັນແມ່ນຫຼັງຈາກທີ່ພຣະເຢຊູໄດ້ເຮັດສຳເລັດພາລະກິດໃນຢູດາຍ, ພາລະກິດຈຶ່ງຂະຫຍາຍໄປສູ່ຊາວຕ່າງຊາດ. (ຊາວອິດສະຣາເອນເອີ້ນທຸກຊາດຍົກເວັ້ນຊາດອິດສະຣາເອນ ວ່າ "ຊາວຕ່າງຊາດ"). ໃນຄວາມຈິງແລ້ວ, ມີຜູ້ຄົນທີ່ຖືກເລືອກຂອງພຣະເຈົ້າໃນຊົນຕ່າງຊາດເຫຼົ່ານັ້ນເຊັ່ນກັນ; ພຽງແຕ່ວ່າບໍ່ມີພາລະກິດໃດຖືກປະຕິບັດໃນພວກເຂົາເທື່ອໃນເວລານັ້ນ. ຜູ້ຄົນໃຫ້ຄວາມສຳຄັນກັບອິດສະຣາເອນ ກໍເພາະສອງຂັ້ນຕອນທຳອິດຂອງພາລະກິດເກີດຂຶ້ນໃນອິດສະຣາເອນ ໃນຂະນະທີ່ບໍ່ມີພາລະກິດໃດຖືກປະຕິບັດໃນຊາວຕ່າງຊາດ. ພາລະກິດທ່າມກາງຊາວຕ່າງຊາດຫາກໍເລີ່ມຕົ້ນຂຶ້ນໃນປັດຈຸບັນ, ນັ້ນຄືເຫດຜົນທີ່ວ່າເປັນຫຍັງຜູ້ຄົນຈຶ່ງຍອມຮັບໄດ້ຍາກຫຼາຍ. ຖ້າເຈົ້າສາມາດເຂົ້າໃຈທຸກສິ່ງນີ້ຢ່າງຊັດເຈນ, ຖ້າເຈົ້າສາມາດຮັບເອົາ ແລະ ເບິ່ງມັນຢ່າງຖືກຕ້ອງ, ແລ້ວເຈົ້າກໍຈະມີຄວາມຮູ້ທີ່ຖືກຕ້ອງກ່ຽວກັບພຣະເຈົ້າໃນປັດຈຸບັນ ແລະ ໃນອະດີດ ແລະ ຄວາມຮູ້ໃໝ່ນີ້ກໍຈະສູງກວ່າຄວາມຮູ້ກ່ຽວກັບພຣະເຈົ້າທີ່ໄພ່ພົນທັງປວງທົ່ວປະຫວັດສາດມີ. ຖ້າເຈົ້າຜະເຊີນກັບພາລະກິດໃນປັດຈຸບັນ ແລະ ໄດ້ຍິນຖ້ອຍຄຳສ່ວນຕົວຂອງພຣະເຈົ້າໃນປັດຈຸບັນ, ແຕ່ເຈົ້າບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າທັງໝົດ ແລະ ການສະແຫວງຫາຂອງເຈົ້າກໍຍັງຄົງເປັນສິ່ງທີ່ມັນເປັນຢູ່ສະເໝີ ແລະ ບໍ່ໄດ້ຖືກທົດແທນດ້ວຍສິ່ງໃໝ່ໆ, ແລະ ໂດຍສະເພາະແລ້ວ ຖ້າເຈົ້າຜະເຊີນກັບພາລະກິດແຫ່ງການເອົາຊະນະນີ້ທັງໝົດ, ແຕ່ໃນທີ່ສຸດແລ້ວ ບໍ່ສາມາດເຫັນການປ່ຽນແປງຫຍັງໃນຕົວເຈົ້າ, ແລ້ວຄວາມເຊື່ອຂອງເຈົ້າຈະບໍ່ເປັນຄືກັບຄົນທີ່ພຽງແຕ່ສະແຫວງຫາເຂົ້າຈີ່ເພື່ອຕອບສະໜອງຄວາມຫິວໂຫຍຂອງພວກເຂົາບໍ? ໃນກໍລະນີນັ້ນ, ພາລະກິດແຫ່ງການເອົາຊະນະກໍຈະບໍ່ຖືກບັນລຸຜົນໃນຕົວເຈົ້າ. ແລ້ວເຈົ້າຈະບໍ່ກາຍເປັນໜຶ່ງໃນບັນດາຄົນທີ່ຈະຖືກກຳຈັດອອກບໍ?

ເມື່ອພາລະກິດທັງໝົດແຫ່ງການເອົາຊະນະມາເຖິງຈຸດສິ້ນສຸດ, ມັນຈຳເປັນທີ່ສຸດທີ່ພວກເຈົ້າທຸກຄົນຈະເຂົ້າໃຈວ່າພຣະເຈົ້າບໍ່ແມ່ນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ, ແຕ່ເປັນພຣະເຈົ້າຂອງການເນລະມິດສ້າງທັງປວງ. ພຣະອົງສ້າງມະນຸດຊາດທັງປວງ, ບໍ່ແມ່ນແຕ່ຊາວອິດສະຣາເອນ. ຖ້າເຈົ້າເວົ້າວ່າ ພຣະເຈົ້າເປັນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ ຫຼື ມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະບັງເກີດໃນຊົນຊາດໃດໜຶ່ງນອກຈາກຊາດອິດສະຣາເອນ, ແລ້ວເຈົ້າກໍຍັງບໍ່ໄດ້ຮັບເອົາຄວາມຮູ້ໃດເລີຍໃນລະຫວ່າງຊ່ວງເວລາຂອງພາລະກິດແຫ່ງການຖືກເອົາຊະນະ ແລະ ເຈົ້າບໍ່ຮັບຮູ້ແມ່ນແຕ່ໃນທາງເລັກນ້ອຍທີ່ສຸດວ່າພຣະເຈົ້າເປັນພຣະເຈົ້າຂອງເຈົ້າ; ເຈົ້າພຽງແຕ່ເຂົ້າໃຈວ່າ ພຣະເຈົ້າເຄື່ອນຍ້າຍຈາກອິດສະຣາເອນໄປຈີນ ແລະ ກຳລັງຖືກບັງຄັບໃຫ້ເປັນພຣະເຈົ້າຂອງເຈົ້າ. ຖ້າສິ່ງນີ້ຍັງເປັນວິທີທີ່ເຈົ້າເບິ່ງສິ່ງຕ່າງໆ, ແລ້ວພາລະກິດຂອງເຮົາກໍບໍ່ເກີດຜົນຫຍັງໃນຕົວເຈົ້າ ແລະ ເຈົ້າກໍບໍ່ໄດ້ເຂົ້າໃຈແມ່ນແຕ່ສິ່ງດຽວທີ່ເຮົາໄດ້ກ່າວໄປ. ໃນທີ່ສຸດແລ້ວ ຖ້າເຈົ້າຂຽນປະຫວັດວົງຕະກູນອີກໜຶ່ງສະບັບໃຫ້ກັບເຮົາຄືກັບ

ທີ່ມັດທາຍເຮັດ, ຊອກຫາບັນພະບຸລຸດທີ່ເໝາະສົມໃຫ້ກັບເຮົາ, ຄົ້ນຫາຜູ້ໃຫ້ກຳເນີດ ທີ່ຖືກຕ້ອງ ຂອງເຮົາ, ຈົນເຖິງກັບວ່າພຣະເຈົ້າມີປະຫວັດວິງຕະກູນສອງສະບັບສຳລັບການບັງເກີດເປັນມະນຸດສອງຄັ້ງຂອງພຣະອົງ, ແລ້ວນັ້ນຈະບໍ່ແມ່ນເລື່ອງຕະຫຼົກທີ່ຕະຫຼົກທີ່ສຸດໃນໂລກບໍ? ແລ້ວໃນຖານະທີ່ເປັນ "ບຸກຄົນທີ່ເຈດຕະນາດີ" ທີ່ຄົ້ນຄິດປະຫວັດວິງຕະກູນໃຫ້ກັບເຮົາ, ເຈົ້າຈະບໍ່ແມ່ນຄົນທີ່ແບ່ງພຣະເຈົ້າບໍ? ເຈົ້າສາມາດແບກຮັບພາລະຂອງຄວາມບາບນີ້ໄດ້ບໍ? ຫຼັງຈາກພາລະກິດແຫ່ງການເອົາຊະນະທັງໝົດນີ້ແລ້ວ, ຖ້າເຈົ້າຍັງບໍ່ເຊື່ອວ່າ ພຣະເຈົ້າເປັນພຣະເຈົ້າຂອງການເນລະມິດສ້າງທັງປວງ, ຖ້າເຈົ້າຍັງຄິດວ່າພຣະເຈົ້າເປັນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ, ແລ້ວເຈົ້າຈະບໍ່ແມ່ນຄົນທີ່ຕໍ່ຕ້ານພຣະເຈົ້າຢ່າງເປີດເຜີຍບໍ? ຈຸດປະສົງຂອງການເອົາຊະນະເຈົ້າໃນປັດຈຸບັນກໍຄືໃຫ້ເຈົ້າຮັບຮູ້ວ່າ ພຣະເຈົ້າເປັນພຣະເຈົ້າຂອງເຈົ້າ ແລະ ຍັງເປັນພຣະເຈົ້າຂອງຄົນອື່ນອີກດ້ວຍ ແລະ ສຳຄັນທີ່ສຸດກໍຄື ພຣະອົງເປັນພຣະເຈົ້າຂອງທຸກຄົນທີ່ຮັກພຣະອົງ ແລະ ພຣະເຈົ້າແຫ່ງການເນລະມິດສ້າງທັງປວງ. ພຣະອົງເປັນພຣະເຈົ້າຂອງຊາວອິດສະຣາເອນ ແລະ ພຣະເຈົ້າຂອງປະຊາຊົນອີຢິບ. ພຣະອົງເປັນພຣະເຈົ້າຂອງຄົນອັງກິດ ແລະ ພຣະເຈົ້າຂອງຄົນອາເມຣິກາ. ພຣະອົງບໍ່ໄດ້ເປັນພຽງແຕ່ພຣະເຈົ້າຂອງອາດາມ ແລະເອວາ, ແຕ່ຍັງເປັນພຣະເຈົ້າຂອງເຊື້ອສາຍທັງໝົດຂອງພວກເຂົາ. ພຣະອົງເປັນພຣະເຈົ້າຂອງທຸກສິ່ງໃນສະຫວັນ ແລະ ທຸກສິ່ງເທິງແຜ່ນດິນໂລກ. ທຸກຄອບຄົວ ບໍ່ວ່າພວກເຂົາຈະເປັນຊາວອິດສະຣາເອນ ຫຼືຊາວຕ່າງຊາດ ກໍລ້ວນແລ້ວແຕ່ຢູ່ໃນມືຂອງພຣະເຈົ້າອົງດຽວ. ບໍ່ພຽງແຕ່ພຣະອົງປະຕິບັດພາລະກິດໃນອິດສະຣາເອນເປັນເວລາສອງສາມພັນປີ ແລະ ເຄີຍບັງເກີດຄັ້ງໜຶ່ງໃນຢູດາຍ, ແຕ່ໃນປັດຈຸບັນ ພຣະອົງລົງມາໃນປະເທດຈີນ, ເຊິ່ງເປັນບ່ອນທີ່ມັງກອນແດງໃຫຍ່ນອນຂົດໂຕຢູ່. ຖ້າການບັງເກີດໃນຢູດາຍເຮັດໃຫ້ພຣະອົງເປັນກະສັດຂອງຊາວຢິວ, ແລ້ວການລົງມາທ່າມກາງພວກເຈົ້າທັງໝົດຈະບໍ່ໄດ້ເຮັດໃຫ້ພຣະອົງເປັນພຣະເຈົ້າຂອງພວກເຈົ້າທຸກຄົນບໍ? ພຣະອົງນຳພາຊາວອິດສະຣາເອນ ແລະ ບັງເກີດໃນຢູດາຍ ແລະ ພຣະອົງຍັງບັງເກີດໃນດິນແດນຕ່າງຊາດອີກດ້ວຍ. ພາລະກິດທັງໝົດທີ່ພຣະອົງປະຕິບັດບໍ່ແມ່ນເພື່ອມະນຸດຊາດທັງປວງທີ່ພຣະອົງໄດ້ສ້າງຂຶ້ນບໍ? ພຣະອົງຮັກຊາວອິດສະຣາເອນຮ້ອຍເທົ່າ ແລະກຽດຊັງຊາວຕ່າງຊາດພັນເທົ່າບໍ? ນັ້ນບໍ່ແມ່ນແນວຄິດຂອງພວກເຈົ້າບໍ? ມັນບໍ່ແມ່ນໃນກໍລະນີທີ່ວ່າພຣະເຈົ້າບໍ່ເຄີຍເປັນພຣະເຈົ້າຂອງພວກເຈົ້າ, ແຕ່ກົງກັນຂ້າມ ມັນເປັນພຽງຍ້ອນວ່າພວກເຈົ້າບໍ່ຮັບຮູ້ພຣະອົງ; ມັນບໍ່ແມ່ນໃນກໍລະນີທີ່ວ່າ ພຣະເຈົ້າບໍ່ເຕັມໃຈທີ່ຈະເປັນພຣະເຈົ້າຂອງພວກເຈົ້າ, ແຕ່ກົງກັນຂ້າມ ມັນເປັນພຽງຍ້ອນວ່າພວກເຈົ້າປະຕິເສດພຣະອົງ. ຜູ້ໃດທ່າມກາງສິ່ງຖືກສ້າງທີ່ບໍ່ໄດ້ຢູ່ໃນກຳມືຂອງອົງຊົງລິດທານຸພາບສູງສຸດ? ໃນການເອົາຊະນະພວກເຈົ້າໃນປັດຈຸບັນ, ເປົ້າໝາຍບໍ່ແມ່ນເພື່ອເຮັດໃຫ້ພວກເຈົ້າຮັບຮູ້ວ່າພຣະເຈົ້າບໍ່ໄດ້ແມ່ນຜູ້ໃດນອກຈາກພຣະເຈົ້າຂອງພວກເຈົ້າບໍ? ຖ້າພວກເຈົ້າຍັງຢືນຢັນວ່າພຣະເຈົ້າເປັນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ ແລະ ຍັງຢືນຢັນວ່າ ຄົວເຮືອນຂອງເດວິດໃນອິດສະຣາເອນແມ່ນບ່ອນກຳເນີດດັ້ງເດີມຂອງພຣະເຈົ້າ ແລະ ບໍ່ມີຊົນຊາດອື່ນນອກຈາກຊາດອິດສະຣາເອນທີ່ມີຄຸນສົມບັດ "ຜະລິດ" ພຣະເຈົ້າ, ແຮງໄກທີ່ຄອບຄົວຕ່າງຊາດຈະສາມາດຮັບເອົາພາລະກິດຂອງພຣະເຢໂຮວາເປັນການສ່ວນຕົວໄດ້, ຖ້າເຈົ້າຍັງຄິດແບບນີ້, ແລ້ວສິ່ງນັ້ນຈະບໍ່ເຮັດໃຫ້

ເຈົ້າເປັນຄົນຕໍ່ຕ້ານຢ່າງດື້ດຶງບໍ? ຢ່າຍຶດຕິດກັບອິດສະຣາເອນຕະຫຼອດ. ພຣະເຈົ້າຢູ່ທີ່ນີ້ທ່າມກາງພວກເຈົ້າໃນປັດຈຸບັນ. ເຈົ້າບໍ່ຄວນສືບຕໍ່ຫຼຽວຂຶ້ນເບິ່ງສະຫວັນ. ຢຸດປາຖະໜາພຣະເຈົ້າຂອງເຈົ້າທີ່ຢູ່ໃນສະຫວັນ! ພຣະເຈົ້າໄດ້ມາຢູ່ທ່າມກາງພວກເຈົ້າ, ແລ້ວພຣະອົງຈະສາມາດຢູ່ໃນສະຫວັນໄດ້ແນວໃດ? ເຈົ້າບໍ່ເຊື່ອໃນພຣະເຈົ້າເປັນເວລາດົນ, ແຕ່ເຈົ້າກໍມີແນວຄິດຫຼາຍຢ່າງກ່ຽວກັບພຣະອົງ ຈົນເຖິງຈຸດທີ່ເຈົ້າບໍ່ກ້າຄິດແມ່ນແຕ່ວິນາທີດຽວວ່າ ພຣະເຈົ້າຂອງຊາວອິດສະຣາເອນຈະຍອມລົດກຽດເພື່ອໃຫ້ກຽດພວກເຈົ້າດ້ວຍການສະຖິດຂອງພຣະອົງ. ແຮງໄກທີ່ພວກເຈົ້າຈະກ້າຄິດວ່າພວກເຈົ້າຈະສາມາດເຫັນພຣະເຈົ້າປາກົດຕົວເປັນການສ່ວນຕົວໄດ້ແນວໃດ ໃນເມື່ອພວກເຈົ້າສົກກະປົກຢ່າງເຫຼືອທົນຂະໜາດນີ້. ພວກເຈົ້າບໍ່ເຄີຍຄິດເລີຍວ່າພຣະເຈົ້າຈະສາມາດລົງມາໃນດິນແດນຕ່າງຊາດເປັນການສ່ວນຕົວ. ພຣະອົງຄວນລົງມາເທິງພູເຂົາຊີນາຍ ຫຼື ພູເຂົາໝາກກອກເທດ ແລະ ປາກົດຕໍ່ຊາວອິດສະຣາເອນ. ຊາວຕ່າງຊາດ (ນັ້ນກໍຄື ຜູ້ຄົນທີ່ຢູ່ນອກອິດສະຣາເອນ) ບໍ່ລ້ວນແລ້ວແຕ່ເປັນເປົ້າໝາຍແຫ່ງການກຽດຊັງຂອງພຣະອົງບໍ? ພຣະອົງຈະສາມາດປະຕິບັດພາລະກິດເປັນການສ່ວນຕົວທ່າມກາງພວກເຂົາໄດ້ແນວໃດ? ທຸກສິ່ງເຫຼົ່ານີ້ແມ່ນແນວຄິດຝັງເລິກທີ່ພວກເຈົ້າໄດ້ມີເປັນເວລາຫຼາຍປີແລ້ວ. ຈຸດປະສົງຂອງການເອົາຊະນະພວກເຈົ້າໃນປັດຈຸບັນແມ່ນເພື່ອພັງທະລາຍແນວຄິດເຫຼົ່ານີ້ຂອງພວກເຈົ້າ. ສະນັ້ນ ພວກເຈົ້າຈຶ່ງຈະໄດ້ເຫັນເຖິງການປາກົດຕົວຂອງພຣະເຈົ້າເປັນການສ່ວນຕົວທ່າມກາງພວກເຈົ້າ, ບໍ່ແມ່ນເທິງພູເຂົາຊີນາຍ ຫຼື ເທິງພູເຂົາໝາກກອກເທດ, ແຕ່ຢູ່ໃນທ່າມກາງຜູ້ຄົນທີ່ພຣະອົງບໍ່ເຄີຍນຳພາມາກ່ອນ. ຫຼັງຈາກທີ່ພຣະເຈົ້າປະຕິບັດສອງຂັ້ນຕອນຂອງພາລະກິດໃນອິດສະຣາເອນ, ຊາວອິດສະຣາເອນ ແລະ ຊາວຕ່າງຊາດທຸກຄົນຈຶ່ງໄດ້ມີແນວຄິດແບບດຽວກັນວ່າ ໃນຂະນະທີ່ມັນແມ່ນຄວາມຈິງທີ່ພຣະເຈົ້າໄດ້ສ້າງສິ່ງທັງປວງ, ແຕ່ພຣະອົງພຽງແຕ່ເຕັມໃຈທີ່ຈະເປັນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ ແລະບໍ່ແມ່ນພຣະເຈົ້າຂອງຊາວຕ່າງຊາດ. ຊາວອິດສະຣາເອນເຊື່ອສິ່ງດັ່ງຕໍ່ໄປນີ້: ພຣະເຈົ້າພຽງແຕ່ສາມາດເປັນພຣະເຈົ້າຂອງພວກເຮົາ, ບໍ່ແມ່ນພຣະເຈົ້າຂອງພວກເຈົ້າທີ່ເປັນຊາວຕ່າງຊາດ ແລະ ຍ້ອນພວກເຈົ້າບໍ່ເຄົາລົບບູຊາພຣະເຢໂຮວາ, ສະນັ້ນ ພຣະເຢໂຮວາທີ່ເປັນພຣະເຈົ້າຂອງພວກເຮົາຈຶ່ງກຽດຊັງພວກເຈົ້າ. ຄົນຢິວເຫຼົ່ານັ້ນຍັງເຊື່ອສິ່ງດັ່ງຕໍ່ໄປນີ້ວ່າ: ພຣະເຢຊູເຈົ້າມີພາບລັກສະນະຂອງພວກເຂົາທີ່ເປັນຄົນຢິວ ແລະ ເປັນພຣະເຈົ້າທີ່ມີສັນຍາລັກຂອງຄົນຢິວ. ພຣະເຈົ້າປະຕິບັດພາລະກິດທ່າມກາງພວກເຮົາ. ພາບລັກສະນະຂອງພຣະເຈົ້າ ແລະ ພາບລັກສະນະຂອງພວກເຮົາກໍຄ້າຍຄືກັນ; ພາບລັກສະນະຂອງພວກເຮົາກໍໃກ້ຄຽງກັບພຣະເຈົ້າ. ພຣະເຢຊູເຈົ້າເປັນກະສັດຂອງພວກເຮົາ ຊາວຢິວ; ຊາວຕ່າງຊາດບໍ່ມີຄຸນສົມບັດທີ່ຈະຮັບເອົາຄວາມລອດພົ້ນທີ່ຍິ່ງໃຫຍ່ແບບນັ້ນ. ພຣະເຢຊູເຈົ້າເປັນເຄື່ອງບູຊາແທນຄວາມຜິດບາບສຳລັບພວກເຮົາ ຊາວຢິວ. ມັນແມ່ນບົນພື້ນຖານຂອງສອງຂັ້ນຕອນເຫຼົ່ານີ້ຂອງພາລະກິດເທົ່ານັ້ນ, ຊາວອິດສະຣາເອນ ແລະ ຄົນຢິວຈຶ່ງເກີດມີແນວຄິດທັງໝົດເຫຼົ່ານີ້. ພວກເຂົາອ້າງສິດຢ່າງທະນົງຕົວວ່າພຣະເຈົ້າເປັນພຣະເຈົ້າສຳລັບພວກເຂົາເອງ, ບໍ່ໃຫ້ພຣະເຈົ້າເປັນພຣະເຈົ້າຂອງຊາວຕ່າງຊາດຄືກັນ. ໃນລັກສະນະນີ້, ພຣະເຈົ້າຈຶ່ງກາຍເປັນຊ່ອງວ່າງໃນຫົວໃຈຂອງຊາວຕ່າງຊາດ. ນີ້ກໍຍ້ອນທຸກຄົນເຊື່ອວ່າພຣະເຈົ້າບໍ່ຕ້ອງການເປັນພຣະເຈົ້າຂອງຊາວຕ່າງຊາດ ແລະ ພຣະອົງພຽງແຕ່ມັກຊາວອິດສະຣາເອນ,

ຜູ້ຄົນທີ່ຖືກເລືອກຂອງພຣະອົງ ແລະ ຄົນຍິວ, ໂດຍສະເພາະແມ່ນສາວົກທີ່ຕິດຕາມພຣະອົງ. ເຈົ້າຮູ້ບໍວ່າ ພາລະກິດທີ່ພຣະເຢໂຮວາ ແລະ ພຣະເຢຊູປະຕິບັດແມ່ນເພື່ອຄວາມຢູ່ລອດຂອງມະນຸດຊາດທັງປວງ? ບັດນີ້ ເຈົ້າຮັບຮູ້ບໍວ່າພຣະເຈົ້າເປັນພຣະເຈົ້າຂອງພວກເຈົ້າທຸກຄົນທີ່ເກີດຢູ່ນອກອິດສະຣາເອນ? ໃນປັດຈຸບັນ ພຣະເຈົ້າບໍ່ໄດ້ຢູ່ໃນທີ່ນີ້ທ່າມກາງພວກເຈົ້າບໍ? ສິ່ງນີ້ບໍ່ໄດ້ເປັນຄວາມຝັນ ແມ່ນບໍ? ພວກເຈົ້າບໍ່ຍອມຮັບເອົາຄວາມເປັນຈິງນີ້ບໍ? ພວກເຈົ້າກ້າທີ່ຈະບໍ່ເຊື່ອ ຫຼື ຄິດກ່ຽວກັບສິ່ງນັ້ນ. ບໍ່ວ່າພວກເຈົ້າຈະເຫັນແນວໃດກໍຕາມ, ພຣະເຈົ້າບໍ່ໄດ້ຢູ່ໃນທີ່ນີ້ທ່າມກາງພວກເຈົ້າບໍ? ພວກເຈົ້າຍັງຢ້ານທີ່ຈະເຊື່ອໃນພຣະທຳເຫຼົ່ານີ້ບໍ? ຕັ້ງແຕ່ມື້ນີ້ເປັນຕົ້ນໄປ, ທຸກຄົນທີ່ຖືກເອົາຊະນະ ແລະ ທຸກຄົນທີ່ປາຖະໜາເປັນຜູ້ຕິດຕາມຂອງພຣະເຈົ້າບໍ່ແມ່ນຜູ້ຄົນທີ່ຖືກເລືອກຂອງພຣະເຈົ້າບໍ? ພວກເຈົ້າທຸກຄົນທີ່ເປັນຜູ້ຕິດຕາມໃນມື້ນີ້ບໍ່ແມ່ນຜູ້ຄົນຖືກເລືອກທີ່ຢູ່ນອກອິດສະຣາເອນບໍ? ສະຖານະຂອງພວກເຈົ້າບໍ່ຄືກັບຊາວອິດສະຣາເອນບໍ? ທຸກສິ່ງນີ້ບໍ່ແມ່ນສິ່ງທີ່ພວກເຈົ້າຄວນຮູ້ຈັກບໍ? ນີ້ບໍ່ແມ່ນເປົ້າໝາຍຂອງພາລະກິດແຫ່ງການເອົາຊະນະພວກເຈົ້າບໍ? ຍ້ອນພວກເຈົ້າສາມາດເຫັນພຣະເຈົ້າ, ພຣະອົງຈະເປັນພຣະເຈົ້າຂອງພວກເຈົ້າຕະຫຼອດໄປ, ນັບຕັ້ງແຕ່ການເລີ່ມຕົ້ນ ແລະ ສູ່ອະນາຄົດ. ພຣະອົງຈະບໍ່ປະຖິ້ມພວກເຈົ້າຕາບໃດທີ່ພວກເຈົ້າທຸກຄົນເຕັມໃຈທີ່ຈະຕິດຕາມພຣະອົງ ແລະ ເປັນສິ່ງຖືກສ້າງທີ່ຊື່ສັດ ແລະ ເຊື່ອຟັງຂອງພຣະອົງ.

ບໍ່ວ່າຜູ້ຄົນປາຖະໜາທີ່ຈະຮັກພຣະເຈົ້າຫຼາຍສໍ່າໃດກໍຕາມ, ໂດຍທົ່ວໄປແລ້ວ ພວກເຂົາໄດ້ເຊື່ອຟັງໃນການຕິດຕາມພຣະອົງຈົນເຖິງປັດຈຸບັນ. ບໍ່ແມ່ນຈົນເຖິງຈຸດສິ້ນສຸດ ເມື່ອຂັ້ນຕອນນີ້ຂອງພາລະກິດສິ້ນສຸດລົງ, ພວກເຂົາຈະກັບໃຈທັງໝົດ. ນັ້ນເປັນເວລາທີ່ຜູ້ຄົນຈະຖືກເອົາຊະນະຢ່າງແທ້ຈິງ. ໃນຕອນນີ້ ພວກເຂົາພຽງແຕ່ຢູ່ໃນຂະບວນການຖືກເອົາຊະນະ. ທັນທີໃດທີ່ພາລະກິດສິ້ນສຸດລົງ, ພວກເຂົາກໍຈະຖືກເອົາຊະນະທັງໝົດ, ແຕ່ຕອນນີ້ບໍ່ແມ່ນກໍລະນີນັ້ນເທື່ອ! ເຖິງແມ່ນທຸກຄົນເຊື່ອ, ນັ້ນກໍບໍ່ໄດ້ໝາຍຄວາມວ່າພວກເຂົາຖືກເອົາຊະນະໂດຍສິ້ນເຊີງ. ນີ້ກໍຍ້ອນໃນປັດຈຸບັນ ຜູ້ຄົນໄດ້ເຫັນພຽງແຕ່ພຣະທຳ ແລະ ບໍ່ແມ່ນເຫດການຕົວຈິງ ແລະ ພວກເຂົາຍັງບໍ່ແນ່ໃຈ, ບໍ່ວ່າພວກເຂົາຈະເຊື່ອຢ່າງເລິກເຊິ່ງຫຼາຍສໍ່າໃດກໍຕາມ. ນັ້ນກໍຍ້ອນດ້ວຍເຫດການຕົວຈິງສຸດທ້າຍເທົ່ານັ້ນ, ພຣະທຳຈຶ່ງຈະກາຍເປັນຈິງ, ຜູ້ຄົນຈຶ່ງຈະຖືກເອົາຊະນະໂດຍສິ້ນເຊີງ. ໃນຕອນນີ້, ຄົນເຫຼົ່ານີ້ຖືກເອົາຊະນະຍ້ອນພວກເຂົາໄດ້ຍິນຄວາມເລິກລັບຫຼາຍຢ່າງທີ່ພວກເຂົາບໍ່ເຄີຍໄດ້ຍິນມາກ່ອນ. ແຕ່ຂ້າງໃນພວກເຂົາແຕ່ລະຄົນ, ພວກເຂົາຍັງຊອກຫາ ແລະ ລໍຖ້າເຫດການຕົວຈິງບາງຢ່າງ ທີ່ເຮັດໃຫ້ພວກເຂົາເຫັນວ່າພຣະທຳທຸກຂໍ້ຂອງພຣະເຈົ້າກຳລັງກາຍເປັນຈິງ. ມີແຕ່ເມື່ອນັ້ນ ພວກເຂົາຈຶ່ງຈະຖືກເຮັດໃຫ້ເຊື່ອຢ່າງສົມບູນ. ມີແຕ່ເມື່ອທຸກຄົນໄດ້ເຫັນເຖິງຄວາມເປັນຈິງທີ່ເກີດຂຶ້ນແທ້ໃນທີ່ສຸດ ແລະ ຄວາມເປັນຈິງເຫຼົ່ານີ້ໄດ້ເຮັດໃຫ້ພວກເຂົາຮູ້ສຶກແນ່ໃຈ, ພວກເຂົາຈຶ່ງຈະສະແດງຄວາມເຊື່ອໝັ້ນໃນຫົວໃຈຂອງພວກເຂົາ, ໃນຄຳເວົ້າຂອງພວກເຂົາ ແລະ ໃນສາຍຕາຂອງພວກເຂົາ ແລະ ຖືກເຮັດໃຫ້ເຊື່ອທັງໝົດຈາກສ່ວນເລິກໃນຫົວໃຈຂອງພວກເຂົາ. ສິ່ງດັ່ງກ່າວແມ່ນທຳມະຊາດຂອງມະນຸດ: ເຈົ້າຈຳເປັນຕ້ອງເຫັນພຣະທຳທຸກຂໍ້ທີ່ກາຍເປັນຈິງ, ເຈົ້າຈຳເປັນຕ້ອງເຫັນເຫດການຕົວຈິງບາງຢ່າງທີ່ເກີດຂຶ້ນ ແລະ ເຫັນໄພພິບັດ

ເກີດຂຶ້ນກັບບາງຄົນ ແລະ ຫຼັງຈາກນັ້ນ ພວກເຈົ້າຈຶ່ງຈະຖືກເຮັດໃຫ້ເຊື່ອຢ່າງສົມບູນພາຍໃນສ່ວນເລິກ. ຄືກັບຊາວຢິວ, ພວກເຈົ້າໝົກມຸ້ນຢູ່ກັບການເຫັນໝາຍສຳຄັນ ແລະ ຄວາມອັດສະຈັນ. ແຕ່ເຖິງຢ່າງນັ້ນ ພວກເຈົ້າກໍຍັງສືບຕໍ່ບໍ່ເຫັນໝາຍສຳຄັນ, ຄວາມອັດສະຈັນ ແລະ ຄວາມເປັນຈິງກຳລັງເກີດຂຶ້ນ ເຊິ່ງມີຈຸດປະສົງເພື່ອເປີດຕາຂອງພວກເຈົ້າໂດຍສະເພາະ. ບໍ່ວ່າຈະເປັນຄົນທີ່ມາຈາກທ້ອງຟ້າ ຫຼື ເສົາເມກທີ່ກຳລັງເວົ້າກັບພວກເຈົ້າ ຫຼື ການທີ່ເຮົາຂັບໄລ່ຜີໃນຄົນໃດໜຶ່ງທ່າມກາງພວກເຈົ້າ ຫຼື ສຽງຂອງເຮົາດັງສະນັ້ນຄືກັບສຽງຟ້າຮ້ອງທ່າມກາງພວກເຈົ້າ, ພວກເຈົ້າກໍຕ້ອງການຢູ່ສະເໝີ ແລະ ຈະຕ້ອງການເຫັນເຫດການແບບນີ້ຢູ່ສະເໝີ. ສາມາດເວົ້າໄດ້ວ່າ ໃນການເຊື່ອພຣະເຈົ້າ ຄວາມປາຖະໜາທີ່ຍິ່ງໃຫຍ່ທີ່ສຸດຂອງພວກເຈົ້າແມ່ນເພື່ອເຫັນພຣະເຈົ້າສະເດັດມາ ແລະ ສະແດງໝາຍສຳຄັນໃຫ້ກັບພວກເຈົ້າເປັນການສ່ວນຕົວ. ແລ້ວພວກເຈົ້າຈຶ່ງຈະພໍໃຈ. ເພື່ອເອົາຊະນະພວກເຈົ້າ, ເຮົາຕ້ອງປະຕິບັດພາລະກິດຄ້າຍຄືກັບການເນລະມິດສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ນອກຈາກນັ້ນກໍສະແດງໝາຍສຳຄັນບາງຢ່າງໃຫ້ກັບເຈົ້າ. ແລ້ວຫົວໃຈຂອງພວກເຈົ້າກໍຈະຖືກເອົາຊະນະຢ່າງຄົບຖ້ວນ.

# ເບື້ອງຫຼັງແທ້ຈິງຂອງ ພາລະກິດແຫ່ງການເອົາຊະນະ (4)

ການຖືກເຮັດໃຫ້ສົມບູນແມ່ນມີຄວາມໝາຍແນວໃດ? ການຖືກເອົາຊະນະແມ່ນມີຄວາມໝາຍແນວໃດ? ຕ້ອງບັນລຸບັນທັດຖານຫຍັງເພື່ອໃຫ້ຜູ້ຄົນຖືກເອົາຊະນະ? ແລ້ວຕ້ອງບັນລຸບັນທັດຖານຫຍັງເພື່ອໃຫ້ພວກເຂົາຖືກເຮັດໃຫ້ສົມບູນ? ການເອົາຊະນະ ແລະ ການເຮັດໃຫ້ສົມບູນ ທັງສອງແມ່ນເພື່ອຈຸດປະສົງຂອງການເຮັດໃຫ້ມະນຸດສົມບູນ ເພື່ອວ່າ ເຂົາຈະສາມາດກັບຄືນໄປສູ່ລັກສະນະດັ່ງເດີມຂອງເຂົາ ແລະ ເປັນອິດສະຫຼະຈາກອຸປະນິໄສແບບຊາຕານທີ່ເສື່ອມຊາມຂອງເຂົາ ແລະ ຈາກອິດທິພົນຂອງຊາຕານ. ການເອົາຊະນະແມ່ນມາກ່ອນຂະບວນການຂອງການປັ້ນມະນຸດ; ແນ່ນອນ ມັນແມ່ນຂັ້ນຕອນທຳອິດຂອງພາລະກິດ. ການເຮັດໃຫ້ສົມບູນແມ່ນຂັ້ນຕອນທີສອງ ຫຼື ມັນຄືພາລະກິດສິ້ນສຸດ. ມະນຸດທຸກຄົນແມ່ນຕ້ອງໄດ້ຜ່ານການຖືກເອົາຊະນະ. ຖ້າບໍ່ສະນັ້ນ ພວກເຂົາຈະບໍ່ມີທາງຮູ້ຈັກພຣະເຈົ້າ ຫຼື ພວກເຂົາຈະບໍ່ຮູ້ວ່າ ມີພຣະເຈົ້າ ນັ້ນໝາຍຄວາມວ່າ ມັນຈະເປັນໄປບໍ່ໄດ້ສຳລັບພວກເຂົາທີ່ຈະຮັບຮູ້ພຣະເຈົ້າ. ແລ້ວຖ້າຜູ້ຄົນບໍ່ຮັບຮູ້ພຣະເຈົ້າ ມັນກໍຈະເປັນໄປບໍ່ໄດ້ສຳລັບພວກເຂົາຈະຖືກເຮັດໃຫ້ສົມບູນໂດຍພຣະເຈົ້າໄດ້ ຍ້ອນພວກເຂົາບໍ່ບັນລຸບັນທັດຖານສຳລັບການສຳເລັດນີ້. ຖ້າເຈົ້າເຖິງກັບບໍ່ຮັບຮູ້ພຣະເຈົ້າ ແລ້ວເຈົ້າຈະສາມາດຮູ້ຈັກພຣະອົງໄດ້ແນວໃດ? ເຈົ້າຈະສະແຫວງຫາພຣະອົງໄດ້ແນວໃດ? ເຈົ້າຍັງຈະບໍ່ສາມາດເປັນພະຍານໃຫ້ກັບພຣະອົງ ແລ້ວແຮງໄກທີ່ຈະມີຄວາມເຊື່ອເພື່ອເຮັດໃຫ້ພຣະອົງພໍໃຈ. ສະນັ້ນ, ສຳລັບໃຜກໍຕາມທີ່ຕ້ອງການຖືກເຮັດໃຫ້ສົມບູນ, ຂັ້ນຕອນທຳອິດແມ່ນຕ້ອງຜ່ານພາລະກິດຂອງການເອົາຊະນະ. ນີ້ແມ່ນເງື່ອນໄຂທຳອິດ. ແຕ່ທັງການເອົາຊະນະ ແລະ ການເຮັດໃຫ້ສົມບູນແມ່ນເພື່ອປັ້ນຜູ້ຄົນ ແລະ ເພື່ອປ່ຽນແປງພວກເຂົາ ແລະ ແຕ່ລະຢ່າງແມ່ນສ່ວນຂອງພາລະກິດຂອງການຄຸ້ມຄອງມະນຸດ. ຂັ້ນຕອນທັງສອງແມ່ນສິ່ງທີ່ຈຳເປັນເພື່ອເຮັດໃຫ້ຜູ້ໃດຜູ້ໜຶ່ງສົມບູນ ແລະ ບໍ່ສາມາດເບິ່ງຂ້າມໄດ້. ມັນແມ່ນຄວາມຈິງທີ່ວ່າ "ການຖືກເອົາຊະນະ" ບໍ່ຟັງເບິ່ງຄືດີຫຼາຍ, ແຕ່ທີ່ຈິງແລ້ວ ຂະບວນການໃນການເອົາຊະນະຜູ້ໃດຜູ້ໜຶ່ງແມ່ນຂັ້ນຕອນໃນການປ່ຽນແປງພວກເຂົາ. ຫຼັງຈາກທີ່ເຈົ້າຖືກເອົາຊະນະ, ອຸປະນິໄສທີ່ເສື່ອມຊາມຂອງເຈົ້າອາດບໍ່ໄດ້ຫຼຸດພົ້ນຢ່າງສົມບູນ ແຕ່ເຈົ້າຈະຮູ້ຈັກກ່ຽວກັບມັນ. ຜ່ານພາລະກິດຂອງການເອົາຊະນະ ເຈົ້າຈະຮູ້ຈັກຄວາມເປັນມະນຸດທີ່ຕໍ່າຕ້ອຍຂອງເຈົ້າພ້ອມທັງຄວາມບໍ່ເຊື່ອຟັງຂອງເຈົ້າອີກດ້ວຍ. ເຖິງແມ່ນວ່າ ເຈົ້າຈະບໍ່ສາມາດປະຖິ້ມ ຫຼື ປ່ຽນແປງສິ່ງຕ່າງໆເຫຼົ່ານີ້ພາຍໃນໄລຍະເວລາສັ້ນໆຂອງພາລະກິດແຫ່ງການເອົາຊະນະ, ເຈົ້າກໍຈະມາຮູ້ຈັກພວກມັນ ແລະ ສິ່ງນີ້ຈະປູພື້ນຖານໃນການເຮັດໃຫ້ສົມບູນຂອງເຈົ້າ. ເມື່ອເປັນດັ່ງນັ້ນ ການເອົາຊະນະ ແລະ ການເຮັດໃຫ້ສົມບູນ ທັງສອງແມ່ນຖືກເຮັດ ເພື່ອປ່ຽນແປງມະນຸດ, ເພື່ອກຳຈັດອຸປະນິໄສແບບຊາຕານທີ່ເສື່ອມຊາມຂອງພວກເຂົາ ເພື່ອວ່າພວກເຂົາຈະສາມາດມອບຕົວເອງໃຫ້ກັບພຣະເຈົ້າຢ່າງສົມບູນ. ການຖືກເອົາຊະນະເປັນພຽງແຕ່ຂັ້ນຕອນທຳອິດໃນການປ່ຽນແປງອຸປະນິໄສຂອງຜູ້ຄົນ ພ້ອມທັງເປັນຂັ້ນຕອນທຳອິດໃນຜູ້ຄົນທີ່ມອບຕົນເອງໃຫ້ແກ່ພຣະເຈົ້າຢ່າງສົມບູນ ແລະ ມັນຕໍ່າກວ່າຂັ້ນຕອນ

ການຖືກເຮັດໃຫ້ສົມບູນ. ຊີວິດ-ອຸປະນິໄສຂອງຄົນທີ່ຖືກເອົາຊະນະແມ່ນແຮງໄກກວ່າບຸກຄົນທີ່ຖືກເຮັດໃຫ້ສົມບູນຫຼາຍ. ການຖືກເອົາຊະນະ ແລະ ການຖືກເຮັດໃຫ້ສົມບູນແມ່ນແຕກຕ່າງກັນໃນດ້ານຄວາມຄິດ ເພາະວ່າພວກມັນແມ່ນຢູ່ໃນໄລຍະທີ່ແຕກຕ່າງກັນຂອງພາລະກິດ ແລະ ເພາະວ່າພວກມັນຍຶດຕິດຜູ້ຄົນໃສ່ມາດຕະຖານທີ່ແຕກຕ່າງກັນ; ການເອົາຊະນະຍຶດຕິດຜູ້ຄົນໃສ່ມາດຕະຖານທີ່ຕໍ່າກວ່າ, ໃນຂະນະທີ່ຄວາມສົມບູນຍຶດຕິດພວກເຂົາໃສ່ມາດຕະຖານທີ່ສູງກວ່າ. ຜູ້ທີ່ສົມບູນແມ່ນຜູ້ຄົນທີ່ຊອບທຳ, ຜູ້ຄົນທີ່ຖືກເຮັດໃຫ້ບໍລິສຸດ; ພວກເຂົາແມ່ນແກ້ວພະລຶກແຫ່ງພາລະກິດຂອງການຄຸ້ມຄອງມະນຸດຊາດ ຫຼື ຜົນໄດ້ຮັບສຸດທ້າຍ. ເຖິງແມ່ນວ່າ ພວກເຂົາບໍ່ແມ່ນມະນຸດທີ່ສົມບູນ, ພວກເຂົາກໍແມ່ນຜູ້ຄົນທີ່ສະແຫວງຫາການດຳລົງຊີວິດທີ່ມີຄວາມໝາຍ. ໃນຂະນະດຽວກັນ ຜູ້ທີ່ຖືກເອົາຊະນະພຽງແຕ່ຮັບຮູ້ວ່າ ພຣະເຈົ້າບັງເກີດເປັນມະນຸດ, ພຣະທຳໄດ້ປາກົດໃນເນື້ອໜັງ ແລະ ພຣະເຈົ້າໄດ້ມາເທິງໂລກເພື່ອປະຕິບັດພາລະກິດແຫ່ງການພິພາກສາ ແລະ ການຂ້ຽນຕີ. ພວກເຂົາຍັງຮັບຮູ້ວ່າ ການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າ ແລະ ການຕີ ແລະ ການຫຼໍ່ຫຼອມຂອງພຣະອົງ ແມ່ນລ້ວນແລ້ວແຕ່ເປັນປະໂຫຍດໃຫ້ແກ່ມະນຸດ. ພວກເຂົາຫາກໍເລີ່ມມີລັກສະນະທີ່ຂ້ອນຂ້າງເປັນມະນຸດເທົ່ານັ້ນ. ພວກເຂົາມີຄວາມເຂົ້າໃຈກ່ຽວກັບຊີວິດ, ແຕ່ມັນກໍຍັງບໍ່ຊັດເຈນສຳລັບພວກເຂົາ. ເວົ້າອີກຢ່າງໜຶ່ງກໍຄື ພວກເຂົາຫາກໍເລີ່ມມີຄວາມເປັນມະນຸດ. ສິ່ງດັ່ງກ່າວແມ່ນຜົນຂອງການຖືກເອົາຊະນະ. ເມື່ອຜູ້ຄົນກ້າວຂາເຂົ້າໃນເສັ້ນທາງສູ່ຄວາມສົມບູນ ອຸປະນິໄສເດີມຂອງພວກເຂົາສາມາດປ່ຽນແປງໄດ້. ນອກຈາກນັ້ນ, ຊີວິດຂອງພວກເຂົາຍັງເຕີບໃຫຍ່ຂຶ້ນເລື້ອຍໆ ແລະ ພວກເຂົາກໍຈະໄດ້ເຂົ້າສູ່ຄວາມຈິງຢ່າງເລິກເຊິ່ງເທື່ອລະໜ້ອຍ. ພວກເຂົາສາມາດກຽດຊັງໂລກ ແລະ ທຸກຄົນທີ່ບໍ່ສະແຫວງຫາຄວາມຈິງ. ໂດຍສະເພາະແມ່ນພວກເຂົາກຽດຊັງຕົວເອງ ແຕ່ຍິ່ງໄປກວ່ານັ້ນ ພວກເຂົາຮູ້ຈັກຕົວເອງຢ່າງຊັດເຈນ. ພວກເຂົາເຕັມໃຈທີ່ຈະດຳລົງຊີວິດໂດຍຄວາມຈິງ ແລະ ພວກເຂົາເຮັດໃຫ້ການສະແຫວງຫາຄວາມຈິງເປັນເປົ້າໝາຍຂອງພວກເຂົາ. ພວກເຂົາບໍ່ເຕັມໃຈດຳລົງຊີວິດພາຍໃນຄວາມຄິດທີ່ສ້າງຂຶ້ນຈາກສະໝອງຂອງພວກເຂົາເອງ ແລະ ພວກເຂົາຮູ້ສຶກກຽດຊັງຄວາມຄິດທີ່ວ່າຕົວເອງຊອບທຳ, ຄວາມອວດດີ ແລະ ຄວາມໂອ້ອວດຂອງມະນຸດ. ພວກເຂົາເວົ້າອອກມາຈາກຄວາມຮູ້ສຶກທີ່ຖືກຕ້ອງຢ່າງແຮງກ້າ, ຈັດການກັບສິ່ງຕ່າງໆດ້ວຍການຢັ່ງຮູ້, ແລະ ສະຕິປັນຍາ ແລະ ຈົ່ງຮັກພັກດີ ແລະ ເຊື່ອຟັງພຣະເຈົ້າ. ຖ້າພວກເຂົາປະສົບກັບກໍລະນີການຂ້ຽນຕີ ແລະ ການພິພາກສາ, ພວກເຂົາຈະບໍ່ພຽງແຕ່ບໍ່ຢູ່ຊື່ໆ ຫຼື ອ່ອນແອເທົ່ານັ້ນ ແຕ່ພວກເຂົາຈະຮູ້ບຸນຄຸນສຳລັບການຂ້ຽນຕີ ແລະ ການພິພາກສາຈາກພຣະເຈົ້າ. ພວກເຂົາເຊື່ອວ່າ ພວກເຂົາບໍ່ສາມາດເຮັດໂດຍທີ່ບໍ່ມີການຂ້ຽນຕີ ແລະ ການພິພາກສາຂອງພຣະເຈົ້າ, ມັນປົກປ້ອງພວກເຂົາ. ພວກເຂົາບໍ່ສະແຫວງຫາຄວາມເຊື່ອແຫ່ງຄວາມສະຫງົບສຸກ ແລະ ສັນຕິສຸກ ແລະ ສະແຫວງຫາເຂົ້າຈີ່ເພື່ອເຮັດໃຫ້ເຊົາຫິວ. ພວກເຂົາບໍ່ສະແຫວງຫາຄວາມສຸກຂອງເນື້ອໜັງແບບຊົ່ວຄາວ. ນີ້ແມ່ນສິ່ງທີ່ເກີດຂຶ້ນໃນຄົນທີ່ຖືກເຮັດໃຫ້ສົມບູນ. ຫຼັງຈາກຜູ້ຄົນຖືກເອົາຊະນະ, ພວກເຂົາກໍຮັບຮູ້ວ່າ ມີພຣະເຈົ້າ, ແຕ່ການຮັບຮູ້ນັ້ນຖືກສຳແດງອອກໃນພວກເຂົາໃນຈຳນວນວິທີທີ່ຈຳກັດ. ພຣະທຳປາກົດໃນຮ່າງກາຍແມ່ນມີຄວາມໝາຍຫຍັງກັນແທ້? ການບັງເກີດເປັນມະນຸດໝາຍເຖິງຫຍັງ?

ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ເຮັດຫຍັງ? ເປົ້າໝາຍ ແລະ ຄວາມສຳຄັນຂອງພາລະກິດຂອງພຣະອົງແມ່ນຫຍັງ? ຫຼັງຈາກທີ່ໄດ້ພະເຊີນກັບພາລະກິດຫຼາຍຢ່າງຂອງພຣະອົງ, ຫຼັງຈາກທີ່ໄດ້ປະສົບກັບການກະທຳຂອງພຣະອົງໃນເນື້ອໜັງ, ເຈົ້າໄດ້ຮັບຫຍັງ? ມີແຕ່ຫຼັງຈາກທີ່ໄດ້ເຂົ້າໃຈທຸກສິ່ງເຫຼົ່ານີ້ເທົ່ານັ້ນ ເຈົ້າຈຶ່ງຈະເປັນຄົນທີ່ຖືກເອົາຊະນະໄດ້. ຖ້າເຈົ້າພຽງເວົ້າວ່າ ເຈົ້າຮັບຮູ້ວ່າມີພຣະເຈົ້າ, ແຕ່ບໍ່ປະຖິ້ມສິ່ງທີ່ເຈົ້າຄວນປະຖິ້ມ ແລະ ລົ້ມເຫຼວທີ່ຈະສະຫຼະຄວາມສຸກທາງເນື້ອໜັງທີ່ເຈົ້າຄວນສະຫຼະຖິ້ມ, ແຕ່ໃນທາງກົງກັນຂ້າມ ເຈົ້າພັດສືບຕໍ່ປາດຖະໜາຄວາມສະບາຍທາງເນື້ອໜັງຄືດັ່ງທີ່ເຈົ້າເປັນມາຕະຫຼອດ ແລະ ຖ້າເຈົ້າບໍ່ສາມາດປ່ອຍວາງອະຄະຕິທີ່ມີຕໍ່ອ້າຍເອື້ອຍນ້ອງ ແລະ ບໍ່ຊຳລະລາຄາໃດໜຶ່ງເພື່ອປະຕິບັດສິ່ງເລັກນ້ອຍຫຼາຍຢ່າງ, ແລ້ວນີ້ກໍພິສູດວ່າ ເຈົ້າຍັງບໍ່ຖືກເອົາຊະນະເທື່ອ. ໃນກໍລະນີນັ້ນ, ເຖິງວ່າມີຫຼາຍຢ່າງທີ່ເຈົ້າເຂົ້າໃຈ, ມັນກໍຈະບໍ່ມີປະໂຫຍດຫຍັງ. ຜູ້ທີ່ຖືກເອົາຊະນະແມ່ນຜູ້ທີ່ບັນລຸການປ່ຽນແປງໃນເບື້ອງຕົ້ນ ແລະ ມີການເຂົ້າສູ່ໃນເບື້ອງຕົ້ນ. ການປະສົບກັບການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າເຮັດໃຫ້ຜູ້ຄົນມີຄວາມຮູ້ເບື້ອງຕົ້ນກ່ຽວກັບພຣະເຈົ້າ ແລະ ຄວາມເຂົ້າໃຈເບື້ອງຕົ້ນກ່ຽວກັບຄວາມຈິງ. ເຈົ້າອາດບໍ່ສາມາດເຂົ້າສູ່ຄວາມເປັນຈິງທີ່ເລິກເຊິ່ງຂຶ້ນ, ຄວາມຈິງທີ່ລະອຽດຍິ່ງຂຶ້ນຢ່າງສົມບູນ, ແຕ່ໃນຊີວິດຕົວຈິງຂອງເຈົ້າ ເຈົ້າກໍສາມາດນຳເອົາຄວາມຈິງຂັ້ນພື້ນຖານມາປະຕິບັດ ເຊັ່ນສິ່ງທີ່ກ່ຽວຂ້ອງກັບຄວາມສຸກທາງເນື້ອໜັງ ຫຼື ສະຖານະສ່ວນຕົວຂອງເຈົ້າ. ທັງໝົດນີ້ແມ່ນຜົນທີ່ຖືກບັນລຸໃນຜູ້ຄົນໃນລະຫວ່າງຂະບວນການການຖືກເອົາຊະນະ. ການປ່ຽນແປງໃນອຸປະນິໄສແມ່ນຍັງສາມາດເຫັນໄດ້ໃນຜູ້ທີ່ຖືກເອົາຊະນະອີກດ້ວຍ; ຕົວຢ່າງເຊັ່ນ: ວິທີທີ່ພວກເຂົານຸ່ງເຄື່ອງ ແລະ ນຳສະເໜີຕົນເອງ ແລະ ວິທີທີ່ພວກເຂົາດຳລົງຊີວິດ, ສິ່ງເຫຼົ່ານີ້ແມ່ນສາມາດປ່ຽນແປງໄດ້. ທັດສະນະຕໍ່ຄວາມເຊື່ອໃນພຣະເຈົ້າຂອງພວກເຂົາແມ່ນປ່ຽນແປງ, ພວກເຂົາຊັດເຈນກ່ຽວກັບເປົ້າໝາຍແຫ່ງການສະແຫວງຫາຂອງພວກເຂົາ ແລະ ພວກເຂົາມີຄວາມທະເຍີທະຍານທີ່ສູງຂຶ້ນ. ໃນລະຫວ່າງພາລະກິດແຫ່ງການເອົາຊະນະ, ການປ່ຽນແປງທີ່ຕາມມາຍັງເກີດຂຶ້ນໃນຊີວິດ-ອຸປະນິໄສຂອງພວກເຂົາ. ມີການປ່ຽນແປງ, ແຕ່ພວກມັນຕື້ນໆ, ພຽງເບື້ອງຕົ້ນ ແລະ ດ້ອຍກວ່າການປ່ຽນແປງໃນອຸປະນິໄສ ແລະ ເປົ້າໝາຍໃນການສະແຫວງຫາຂອງຄົນທີ່ຖືກເຮັດໃຫ້ສົມບູນ. ຖ້າໃນຊ່ວງໄລຍະຂອງການຖືກເອົາຊະນະ ອຸປະນິໄສຂອງບຸກຄົນໃດໜຶ່ງບໍ່ໄດ້ປ່ຽນແປງເລີຍ ແລະ ພວກເຂົາບໍ່ໄດ້ຮັບຄວາມຈິງຫຍັງ, ແລ້ວຄົນປະເພດນີ້ກໍເປັນຂີ້ເຫຍື້ອ ແລະ ໃຊ້ການບໍ່ໄດ້ແທ້ໆ! ຜູ້ຄົນທີ່ບໍ່ຖືກເອົາຊະນະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້! ຖ້າຄົນພຽງແຕ່ສະແຫວງຫາການຖືກເອົາຊະນະເທົ່ານັ້ນ, ແລ້ວພວກເຂົາກໍຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້ ເຖິງແມ່ນວ່າອຸປະນິໄສຂອງພວກເຂົາຈະສະແດງໃຫ້ເຫັນເຖິງການປ່ຽນແປງບາງຢ່າງທີ່ຕາມມາໃນລະຫວ່າງພາລະກິດແຫ່ງການເອົາຊະນະ. ພວກເຂົາຍັງຈະສູນເສຍຄວາມຈິງເບື້ອງຕົ້ນທີ່ເຂົາໄດ້ຮັບ. ມີຄວາມແຕກຕ່າງຢ່າງຫຼວງຫຼາຍລະຫວ່າງການປ່ຽນແປງໃນອຸປະນິໄສໃນຜູ້ທີ່ຖືກເອົາຊະນະ ແລະ ຄົນທີ່ຖືກເຮັດໃຫ້ສົມບູນ. ແຕ່ການຖືກເອົາຊະນະແມ່ນບາດກ້າວທຳອິດໃນການປ່ຽນແປງ; ມັນຄືພື້ນຖານ. ການຂາດການປ່ຽນແປງເບື້ອງຕົ້ນນີ້ກໍເປັນເຄື່ອງພິສູດວ່າ ບຸກຄົນໃດໜຶ່ງບໍ່ຮູ້ຈັກພຣະເຈົ້າເລີຍ ຍ້ອນຄວາມຮູ້ນີ້ແມ່ນມາຈາກການພິພາກສາ ແລະ ການພິພາກສາດັ່ງກ່າວນີ້ແມ່ນສ່ວນສຳຄັນ

ຂອງພາລະກິດແຫ່ງການເອົາຊະນະ. ເມື່ອເປັນດັ່ງນັ້ນ ທຸກຄົນທີ່ຖືກເຮັດໃຫ້ສົມບູນແມ່ນຕ້ອງໄດ້ຖືກເອົາຊະນະກ່ອນ; ຖ້າບໍ່ດັ່ງນັ້ນ ມັນຈະບໍ່ມີທາງທີ່ພວກເຂົາຈະຖືກເຮັດໃຫ້ສົມບູນ.

ເຈົ້າເວົ້າວ່າ ເຈົ້າຮັບຮູ້ພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ເຈົ້າຮັບຮູ້ການປາກົດຕົວຂອງພຣະທຳໃນເນື້ອໜັງ, ແຕ່ເຈົ້າກໍເຮັດບາງຢ່າງລັບຫຼັງພຣະອົງ, ສິ່ງຕ່າງໆທີ່ຂັດກັບສິ່ງທີ່ພຣະອົງຮຽກຮ້ອງ ແລະ ໃນຫົວໃຈຂອງເຈົ້າ ເຈົ້າບໍ່ມີຄວາມຢຳເກງພຣະອົງເລີຍ. ນີ້ແມ່ນການຮັບຮູ້ພຣະເຈົ້າບໍ? ເຈົ້າຮັບຮູ້ສິ່ງທີ່ພຣະອົງກ່າວ, ແຕ່ເຈົ້າບໍ່ປະຕິບັດສິ່ງທີ່ເຈົ້າສາມາດເຮັດ ຫຼື ເຈົ້າບໍ່ປະຕິບັດຕາມວິທີທາງຂອງພຣະອົງ. ນີ້ແມ່ນການຮັບຮູ້ພຣະເຈົ້າບໍ? ແລ້ວເຖິງແມ່ນເຈົ້າຮັບຮູ້ພຣະອົງ, ທັດສະນະຄະຕິຂອງເຈົ້າກໍພຽງເປັນທັດສະນະຄະຕິທີ່ເຝົ້າເບິ່ງພຣະອົງ, ບໍ່ເຄີຍຢຳເກງຈັກເທື່ອ. ຖ້າເຈົ້າໄດ້ເຫັນ ແລະ ຮັບຮູ້ເຖິງພາລະກິດຂອງພຣະອົງ ແລະ ຮູ້ວ່າພຣະອົງແມ່ນພຣະເຈົ້າ, ແຕ່ເຈົ້າຍັງເມີນເສີຍ ແລະ ບໍ່ປ່ຽນແປງຢ່າງແທ້ຈິງ, ແລ້ວເຈົ້າກໍຈະເປັນຄົນປະເພດທີ່ຍັງບໍ່ຖືກເອົາຊະນະເທື່ອ. ຄົນທີ່ຖືກເອົາຊະນະຕ້ອງໄດ້ເຮັດທຸກຢ່າງທີ່ເຂົາສາມາດເຮັດໄດ້ ແລະ ເຖິງແມ່ນພວກເຂົາບໍ່ສາມາດເຂົ້າສູ່ຄວາມຈິງທີ່ສູງສົ່ງຂຶ້ນ ແລະ ຄວາມຈິງເຫຼົ່ານີ້ອາດນອກເໜືອໄປກວ່າພວກເຂົາ, ຜູ້ຄົນດັ່ງກ່າວກໍເຕັມໃຈທີ່ຈະບັນລຸສິ່ງນີ້. ມັນເປັນຍ້ອນວ່າມີຂໍ້ຈຳກັດໃນສິ່ງທີ່ເຂົາສາມາດຮັບເອົາ ຈຶ່ງມີຂອບເຂດ ແລະ ຂໍ້ຈຳກັດໃນສິ່ງທີ່ພວກເຂົາສາມາດປະຕິບັດ. ເຖິງຢ່າງໃດກໍຕາມ ຢ່າງໜ້ອຍທີ່ສຸດ ພວກເຂົາກໍຕ້ອງໄດ້ເຮັດທຸກສິ່ງທຸກຢ່າງທີ່ພວກເຂົາສາມາດເຮັດໄດ້ ແລະ ຖ້າເຈົ້າສາມາດບັນລຸສິ່ງນັ້ນໄດ້, ນີ້ກໍເປັນຜົນທີ່ຖືກບັນລຸ ຍ້ອນພາລະກິດແຫ່ງການເອົາຊະນະ. ສົມມຸດເຈົ້າເວົ້າວ່າ "ຖ້າພຣະອົງສາມາດກ່າວພຣະທຳຫຼາຍຂໍ້ທີ່ມະນຸດບໍ່ສາມາດເຮັດໄດ້, ຖ້າພຣະອົງບໍ່ແມ່ນພຣະເຈົ້າ, ແລ້ວເປັນຜູ້ໃດ?" ການມີຄວາມຄິດດັ່ງກ່າວບໍ່ໄດ້ໝາຍຄວາມວ່າເຈົ້າຮັບຮູ້ພຣະເຈົ້າ. ຖ້າເຈົ້າຮັບຮູ້ພຣະເຈົ້າ ເຈົ້າກໍຕ້ອງສະແດງມັນອອກມາຜ່ານການກະທຳຕົວຈິງຂອງເຈົ້າ. ຖ້າເຈົ້ານຳພາຄຣິສຕະຈັກ, ແຕ່ບໍ່ສາມາດປະຕິບັດຄວາມຊອບທຳ, ຖ້າເຈົ້າປາຖະໜາຫາເງິນ ແລະ ຄວາມຮັ່ງມີ ແລະ ກອບໂກຍເອົາເງິນຂອງຄຣິສຕະຈັກເຂົ້າຖົງຕົວເອງຢ່າງລັບໆຕະຫຼອດ, ນີ້ແມ່ນການຮັບຮູ້ວ່າມີພຣະເຈົ້າຢູ່ບໍ? ພຣະເຈົ້າແມ່ນມີລິດທານຸພາບສູງສຸດ ແລະ ພຣະອົງສົມຄວນແກ່ການເຄົາລົບຢຳເກງພຣະອົງ. ເຈົ້າຈະບໍ່ຢ້ານໄດ້ແນວໃດ ວ່າເຈົ້າຮັບຮູ້ວ່າມີພຣະເຈົ້າຢ່າງແທ້ຈິງ ຫຼື ບໍ? ຖ້າເຈົ້າສາມາດເຮັດໃນສິ່ງທີ່ຊົ່ວຊ້າດັ່ງກ່າວ, ເຈົ້າຮັບຮູ້ພຣະອົງຢ່າງແທ້ຈິງບໍ? ແມ່ນພຣະເຈົ້າບໍທີ່ເຈົ້າເຊື່ອ? ສິ່ງທີ່ເຈົ້າເຊື່ອແມ່ນພຣະເຈົ້າທີ່ເລື່ອນລອຍ; ນັ້ນແມ່ນເຫດຜົນທີ່ເຈົ້າບໍ່ຢ້ານ! ຜູ້ທີ່ຮັບຮູ້ຢ່າງແທ້ຈິງ ແລະ ຮູ້ຈັກພຣະເຈົ້າ ແມ່ນລ້ວນແລ້ວແຕ່ຢຳເກງພຣະອົງ ແລະ ຢ້ານທີ່ຈະເຮັດໃນສິ່ງທີ່ຕໍ່ຕ້ານກັບພຣະອົງ ຫຼື ສິ່ງທີ່ຄັດກັບສາມັນສຳນຶກຂອງພວກເຂົາ; ໂດຍສະເພາະແລ້ວ ພວກເຂົາແມ່ນຢ້ານທີ່ຈະເຮັດໃນສິ່ງທີ່ພວກເຂົາຮູ້ວ່າຂັດກັບຄວາມປະສົງຂອງພຣະເຈົ້າ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງສາມາດຖືໄດ້ວ່າເປັນການຮັບຮູ້ເຖິງການເປັນຢູ່ຂອງພຣະເຈົ້າ. ເຈົ້າຄວນເຮັດຫຍັງ ເມື່ອພໍ່ແມ່ຂອງເຈົ້າພະຍາຍາມຢຸດເຈົ້າບໍ່ໃຫ້ເຊື່ອໃນພຣະເຈົ້າ? ເຈົ້າຄວນຮັກພຣະເຈົ້າແນວໃດ ເມື່ອຜົວຂອງເຈົ້າທີ່ບໍ່ມີຄວາມເຊື່ອໄດ້ປະຕິບັດກັບເຈົ້າເປັນຢ່າງດີ? ແລ້ວເຈົ້າຄວນຮັກພຣະເຈົ້າແນວໃດ ເມື່ອອ້າຍເອື້ອຍນ້ອງກຽດຊັງເຈົ້າ? ຖ້າເຈົ້າຮັບຮູ້ພຣະອົງ, ແລ້ວໃນສິ່ງເຫຼົ່ານີ້ ເຈົ້າກໍຈະປະຕິບັດຢ່າງເໝາະສົມ ແລະ ດຳລົງຢູ່ໃນ

ຄວາມເປັນຈິງ. ຖ້າເຈົ້າລົ້ມເຫຼວທີ່ຈະປະຕິບັດຢ່າງເປັນຮູບປະທຳ ມີພຽງແຕ່ເວົ້າວ່າ ເຈົ້າຮັບຮູ້ການເປັນຢູ່ຂອງພຣະເຈົ້າເທົ່ານັ້ນ, ແລ້ວເຈົ້າກໍຈະເປັນພຽງແຕ່ນັກເວົ້າ! ເຈົ້າເວົ້າວ່າ ເຈົ້າເຊື່ອໃນພຣະອົງ ແລະ ຮັບຮູ້ພຣະອົງ, ແຕ່ເຈົ້າຮັບຮູ້ພຣະອົງໃນລັກສະນະໃດ? ເຈົ້າເຊື່ອໃນພຣະອົງໃນລັກສະນະໃດ? ເຈົ້າຢຳເກງພຣະອົງບໍ? ເຈົ້າເຄົາລົບບູຊາພຣະອົງບໍ? ເຈົ້າຮັກພຣະອົງຢ່າງເລິກເຊິ່ງຢູ່ພາຍໃນບໍ? ເມື່ອເຈົ້າໂສກເສົ້າ ແລະ ບໍ່ມີໃຜໃຫ້ເພິ່ງພາ, ເຈົ້າຈະຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະເຈົ້າ, ແຕ່ຫຼັງຈາກນັ້ນເຈົ້າກໍຈະລືມທຸກຢ່າງກ່ຽວກັບສິ່ງນັ້ນ. ນັ້ນບໍ່ແມ່ນການຮັກພຣະເຈົ້າ ຫຼື ມັນບໍ່ແມ່ນການເຊື່ອໃນພຣະເຈົ້າ! ໃນທີ່ສຸດແລ້ວ ສິ່ງທີ່ພຣະເຈົ້າປາຖະໜາໃຫ້ມະນຸດບັນລຸແມ່ນຫຍັງ? ສະພາວະທັງໝົດທີ່ເຮົາໄດ້ກ່າວມາ ເຊັ່ນການຮູ້ສຶກປະທັບໃຈກັບຄວາມສຳຄັນຂອງເຈົ້າເອງ, ການຮູ້ສຶກວ່າ ເຈົ້າຮັບຮູ້ສິ່ງຕ່າງໆ ແລະ ເຂົ້າໃຈສິ່ງໃໝ່ໆໄດ້ໄວ, ການຄວບຄຸມຄົນອື່ນ, ການດູຖູກຄົນອື່ນ, ການຕັດສິນຄົນອື່ນຕາມຮູບຮ່າງລັກສະນະຂອງພວກເຂົາ, ການຂົ່ມເຫັງຄົນໄຮ້ດຽງສາ, ການຢາກໄດ້ເງິນຂອງຄຣິສຕະຈັກ ແລະ ອື່ນໆອີກ, ມີແຕ່ເມື່ອອຸປະນິໄສທີ່ເສື່ອມຊາມແບບຊາຕານທັງໝົດເຫຼົ່ານີ້ຖືກກຳຈັດອອກຈາກຕົວເຈົ້າເປັນບາງສ່ວນເທົ່ານັ້ນ ການເອົາຊະນະຂອງເຈົ້າກໍຈະຖືກເຮັດໃຫ້ແຈ່ມແຈ້ງຂຶ້ນ.

ພາລະກິດແຫ່ງການເອົາຊະນະທີ່ຖືກເຮັດໃນຕົວພວກເຈົ້າທຸກຄົນແມ່ນສິ່ງທີ່ສຳຄັນທີ່ສຸດ ໃນດ້ານໜຶ່ງ, ຈຸດປະສົງຂອງພາລະກິດນີ້ແມ່ນເພື່ອເຮັດໃຫ້ກຸ່ມຄົນມີຄວາມສົມບູນ ນັ້ນໝາຍຄວາມວ່າເພື່ອເຮັດໃຫ້ພວກເຂົາສົມບູນ, ເພື່ອວ່າພວກເຂົາອາດກາຍມາເປັນກຸ່ມຂອງຜູ້ຖືກເອົາຊະນະ, ເປັນກຸ່ມຄົນທຳອິດທີ່ຖືກເຮັດໃຫ້ສົມບູນ ເຊິ່ງໝາຍເຖິງເປັນໝາກຜົນທຳອິດ. ສ່ວນອີກດ້ານໜຶ່ງ, ມັນແມ່ນເພື່ອໃຫ້ສິ່ງຖືກສ້າງມີຄວາມສຸກກັບຄວາມຮັກຂອງພຣະເຈົ້າ, ໄດ້ຮັບຄວາມລອດພົ້ນຢ່າງສົມບູນ ແລະ ຍິ່ງໃຫຍ່ທີ່ສຸດຂອງພຣະເຈົ້າ, ໃຫ້ມະນຸດບໍ່ພຽງແຕ່ມີຄວາມສຸກກັບຄວາມກະລຸນາ ແລະ ຄວາມຮັກເມດຕາເທົ່ານັ້ນ, ແຕ່ທີ່ສຳຄັນກວ່ານັ້ນແມ່ນການຂ້ຽນຕີ ແລະ ການພິພາກສາ. ຈາກການຊົງສ້າງໂລກຈົນຮອດປັດຈຸບັນ, ທຸກສິ່ງທີ່ພຣະເຈົ້າໄດ້ກະທຳໃນພາລະກິດຂອງພຣະອົງແມ່ນຄວາມຮັກໂດຍບໍ່ມີຄວາມກຽດຊັງແກ່ມະນຸດ. ແມ່ນແຕ່ການຂ້ຽນຕີ ແລະ ການພິພາກສາທີ່ເຈົ້າໄດ້ເຫັນກໍຍັງແມ່ນຄວາມຮັກ, ຄວາມຮັກທີ່ເປັນຈິງຍິ່ງຂຶ້ນ ແລະ ແທ້ຈິງຍິ່ງຂຶ້ນ, ຄວາມຮັກທີ່ນຳພາຜູ້ຄົນໄປສູ່ເສັ້ນທາງທີ່ຖືກຕ້ອງໃນຊີວິດມະນຸດ. ໃນອີກດ້ານໜຶ່ງ, ມັນແມ່ນເພື່ອເປັນພະຍານຕໍ່ໜ້າຊາຕານ. ແລ້ວໃນອີກດ້ານໜຶ່ງອີກ, ມັນແມ່ນເພື່ອວາງຮາກຖານສຳລັບການເຜີຍແຜ່ພາລະກິດແຫ່ງຂ່າວປະເສີດໃນອະນາຄົດ. ພາລະກິດທັງໝົດທີ່ພຣະອົງໄດ້ກະທຳແມ່ນເພື່ອຈຸດປະສົງຂອງການນຳພາຜູ້ຄົນໄປສູ່ເສັ້ນທາງທີ່ຖືກຕ້ອງແຫ່ງຊີວິດມະນຸດ ເພື່ອວ່າພວກເຂົາອາດຈະມີຊີວິດດັ່ງມະນຸດທີ່ປົກກະຕິ, ຍ້ອນຜູ້ຄົນບໍ່ເຂົ້າໃຈວິທີການດຳລົງຊີວິດ ແລະ ຫາກປາສະຈາກການນຳພານີ້, ເຈົ້າຈະສາມາດດຳລົງຊີວິດຢ່າງວ່າງເປົ່າເທົ່ານັ້ນ; ຊີວິດຂອງເຈົ້າປາສະຈາກຄຸນຄ່າ ຫຼື ຄວາມໝາຍ ແລະ ເຈົ້າຈະບໍ່ສາມາດເປັນຄົນທຳມະດາຢ່າງສິ້ນເຊີງ. ນີ້ແມ່ນຄວາມສຳຄັນທີ່ເລິກເຊິ່ງທີ່ສຸດຂອງພາລະກິດແຫ່ງການເອົາຊະນະມະນຸດ. ພວກເຈົ້າທຸກຄົນແມ່ນເຊື້ອສາຍຂອງໂມອາບ; ເມື່ອພາລະກິດແຫ່ງການເອົາຊະນະຖືກປະຕິບັດໃນຕົວພວກເຈົ້າ, ມັນຄືຄວາມລອດພົ້ນອັນຍິ່ງໃຫຍ່. ພວກເຈົ້າທຸກຄົນດຳລົງຊີວິດຢູ່ໃນດິນແດນແຫ່ງ

ຄວາມບາບ ແລະ ຄວາມຜິດສິນທຳ ແລະ ພວກເຈົ້າທຸກຄົນແມ່ນຄົນທີ່ຜິດສິນທຳ ແລະ ເປັນຄົນບາບ. ໃນປັດຈຸບັນ ພວກເຈົ້າບໍ່ພຽງແຕ່ຈະໄດ້ເຝົ້າເບິ່ງພຣະເຈົ້າ, ແຕ່ສຳຄັນໄປກວ່ານັ້ນ ພວກເຈົ້າໄດ້ຮັບການຂ້ຽນຕີ ແລະ ການພິພາກສາ, ພວກເຈົ້າໄດ້ຮັບຄວາມລອດພົ້ນຢ່າງເລິກເຊິ່ງແທ້ໆ ນັ້ນໝາຍຄວາມວ່າ ພວກເຈົ້າໄດ້ຮັບຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າ. ໃນທຸກສິ່ງທີ່ພຣະເຈົ້າເຮັດ, ພຣະເຈົ້າຮັກພວກເຈົ້າຢ່າງແທ້ຈິງ. ພຣະອົງບໍ່ໄດ້ມີເຈດຕະນາຮ້າຍ. ມັນເປັນຍ້ອນຄວາມຜິດບາບຂອງພວກເຈົ້າ, ພຣະອົງພິພາກສາພວກເຈົ້າ ເພື່ອວ່າພວກເຈົ້າຈະກວດສອບຕົນເອງ ແລະ ຮັບຄວາມລອດພົ້ນທີ່ຍິ່ງໃຫຍ່ນີ້. ທັງໝົດນີ້ກໍເພື່ອຈຸດປະສົງໃນການເຮັດມະນຸດໃຫ້ສົມບູນ. ຕັ້ງແຕ່ຕົ້ນຈົນຈົບ, ພຣະເຈົ້າໄດ້ກະທຳຢ່າງສຸດຄວາມສາມາດຂອງພຣະອົງ ເພື່ອຊ່ວຍໃຫ້ມະນຸດລອດພົ້ນ ແລະ ບໍ່ມີຄວາມປາຖະໜາທີ່ຈະທຳລາຍມະນຸດທີ່ພຣະອົງສ້າງຂຶ້ນມາດ້ວຍມືຂອງພຣະອົງຢ່າງສິ້ນເຊີງ. ຕອນນີ້ ພຣະອົງໄດ້ມາຢູ່ທ່າມກາງພວກເຈົ້າເພື່ອປະຕິບັດພາລະກິດ; ນີ້ຍິ່ງບໍ່ແມ່ນຄວາມລອດພົ້ນບໍ? ຖ້າພຣະອົງກຽດຊັງພວກເຈົ້າ, ພຣະອົງຍັງຈະປະຕິບັດພາລະກິດທີ່ສຳຄັນດັ່ງນັ້ນເພື່ອນຳພາພວກເຈົ້າດ້ວຍຕົວພຣະອົງເອງບໍ? ເປັນຫຍັງພຣະອົງຈຶ່ງຕ້ອງທົນທຸກແບບນັ້ນ? ພຣະເຈົ້າບໍ່ໄດ້ກຽດຊັງພວກເຈົ້າ ຫຼື ມີເຈດຕະນາຮ້າຍຕໍ່ພວກເຈົ້າ. ພວກເຈົ້າຄວນຮູ້ວ່າ ຄວາມຮັກຂອງພຣະເຈົ້າ ແມ່ນຄວາມຮັກທີ່ແທ້ຈິງທີ່ສຸດ. ມັນເປັນຍ້ອນຜູ້ຄົນບໍ່ເຊື່ອຟັງ ພຣະອົງຈຶ່ງຕ້ອງໄດ້ຊ່ວຍພວກເຂົາໃຫ້ລອດພົ້ນຜ່ານການພິພາກສາ; ຖ້າບໍ່ສະນັ້ນ, ການຊ່ວຍພວກເຂົາໃຫ້ລອດພົ້ນກໍເປັນໄປບໍ່ໄດ້. ຍ້ອນພວກເຈົ້າບໍ່ຮູ້ຈັກວິທີດຳລົງຊີວິດ ແລະ ເຖິງກັບບໍ່ຮູ້ວິທີການດຳລົງຊີວິດ ແລະ ຍ້ອນພວກເຈົ້າດຳລົງຊີວິດຢູ່ໃນດິນແດນທີ່ຜິດສິນທຳ ແລະ ຜິດບາບນີ້ ແລະ ພວກເຈົ້າເອງເປັນຜີຮ້າຍທີ່ຜິດສິນທຳ ແລະ ສົກກະປົກ, ພຣະອົງຈຶ່ງບໍ່ສາມາດທົນປ່ອຍໃຫ້ພວກເຈົ້າຊົ່ວຊ້າລົງກວ່າເກົ່າ, ພຣະອົງບໍ່ສາມາດທົນເຫັນພວກເຈົ້າດຳລົງຊີວິດໃນດິນແດນທີ່ສົກກະປົກນີ້ດັ່ງທີ່ພວກເຈົ້າເຮັດໃນຕອນນີ້, ຖືກຊາຕານຢຽບຢໍ່າຢ່າງຕາມໃຈ ແລະ ພຣະອົງບໍ່ສາມາດທົນປ່ອຍໃຫ້ພວກເຈົ້າຕົກລົງສູ່ດິນແດນມໍລະນາ. ພຣະອົງພຽງແຕ່ຕ້ອງການຮັບເອົາຄົນກຸ່ມນີ້ເທົ່ານັ້ນ ແລະ ຊ່ວຍພວກເຈົ້າໃຫ້ພົ້ນຢ່າງສົມບູນ. ນີ້ແມ່ນຈຸດປະສົງຫຼັກຂອງການປະຕິບັດພາລະກິດແຫ່ງການເອົາຊະນະໃນຕົວພວກເຈົ້າ, ມັນພຽງແຕ່ເພື່ອຄວາມລອດພົ້ນ. ຖ້າເຈົ້າບໍ່ສາມາດເຫັນວ່າ ທຸກສິ່ງທີ່ປະຕິບັດໃນຕົວເຈົ້າແມ່ນຄວາມຮັກ ແລະ ຄວາມລອດພົ້ນ, ຖ້າເຈົ້າຄິດວ່າ ມັນເປັນພຽງວິທີການ, ວິທີທໍລະມານມະນຸດ ແລະ ເປັນບາງສິ່ງທີ່ເຊື່ອຖືບໍ່ໄດ້, ແລ້ວເຈົ້າກໍອາດຕ້ອງກັບໄປທີ່ໂລກຂອງເຈົ້າເພື່ອທົນທຸກກັບຄວາມເຈັບປວດ ແລະ ຄວາມລຳບາກ! ຖ້າເຈົ້າເຕັມໃຈທີ່ຈະຢູ່ໃນກະແສນີ້ ແລະ ເພີດເພີນກັບການພິພາກສານີ້ ແລະ ຄວາມລອດພົ້ນທີ່ຍິ່ງໃຫຍ່ນີ້, ເພີດເພີນກັບພອນທັງໝົດເຫຼົ່ານີ້, ພອນທີ່ບໍ່ສາມາດພົບເຫັນໄດ້ບ່ອນໃດບ່ອນໜຶ່ງຢູ່ໃນໂລກມະນຸດ ແລະ ເພີດເພີນກັບຄວາມຮັກນີ້, ແລ້ວໃຫ້ເຮັດດີໆ: ຢູ່ໃນກະແສນີ້ເພື່ອຍອມຮັບພາລະກິດແຫ່ງການເອົາຊະນະ ເພື່ອວ່າເຈົ້າຈະສາມາດຖືກເຮັດໃຫ້ສົມບູນ. ໃນມື້ນີ້ ເຈົ້າອາດທົນທຸກກັບຄວາມເຈັບປວດເລັກນ້ອຍ ແລະ ການຫຼົ່ຫຼອມ ຍ້ອນການພິພາກສາຂອງພຣະເຈົ້າ, ແຕ່ມີຄຸນຄ່າ ແລະ ຄວາມໝາຍໃນການທົນທຸກກັບຄວາມເຈັບປວດນີ້. ເຖິງແມ່ນວ່າຜູ້ຄົນຖືກຫຼົ່ຫຼອມ ແລະ ຖືກເປີດໂປງໂດຍການຂ້ຽນຕີ ແລະ ການພິພາກສາຂອງພຣະເຈົ້າຢ່າງໄຮ້ປານີ,

ເປົ້າໝາຍກໍແມ່ນເພື່ອລົງໂທດພວກເຂົາສຳລັບຄວາມຜິດບາບຂອງພວກເຂົາ, ລົງໂທດເນື້ອໜັງຂອງພວກເຂົາ, ບໍ່ມີຫຍັງໃນພາລະກິດນີ້ທີ່ມີເຈດຕະນາປະນາມເນື້ອໜັງໃຫ້ພັງທະລາຍ. ການເປີດເຜີຍຢ່າງໂຫດຮ້າຍຂອງພຣະທຳແມ່ນພຽງເພື່ອຈຸດປະສົງໃນການນຳພາເຈົ້າເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ພວກເຈົ້າໄດ້ປະສົບກັບພາລະກິດນີ້ດ້ວຍຕົວເອງຢ່າງຫຼວງຫຼາຍ ແລະ ເຫັນໄດ້ຊັດເຈນວ່າ ມັນບໍ່ໄດ້ນຳພາພວກເຈົ້າເຂົ້າສູ່ເສັ້ນທາງທີ່ຊົ່ວຮ້າຍ! ທັງໝົດນີ້ແມ່ນເພື່ອເຮັດໃຫ້ເຈົ້າສາມາດດຳລົງຢູ່ດ້ວຍຄວາມເປັນມະນຸດທີ່ປົກກະຕິ ແລະ ທັງໝົດນີ້ແມ່ນສາມາດບັນລຸໄດ້ໂດຍຄວາມເປັນມະນຸດປົກກະຕິຂອງເຈົ້າ. ທຸກຂັ້ນຕອນຂອງພາລະກິດຂອງພຣະເຈົ້າແມ່ນອີງຕາມຄວາມຕ້ອງການຂອງເຈົ້າ, ຕາມຄວາມອ່ອນແອຂອງເຈົ້າ ແລະ ຕາມວຸດທິພາວະແທ້ຈິງຂອງເຈົ້າ ແລະ ບໍ່ມີພາລະທີ່ບໍ່ສາມາດທົນໄດ້ຖືກວາງໃສ່ພວກເຈົ້າ. ສິ່ງນີ້ບໍ່ໄດ້ຊັດເຈນຕໍ່ເຈົ້າໃນປັດຈຸບັນ ແລະ ເຈົ້າຮູ້ສຶກຄືກັບວ່າ ເຮົາເຂັ້ມງວດກັບເຈົ້າ ແລະ ແນ່ນອນເຈົ້າເຊື່ອຢູ່ສະເໝີວ່າ ເຫດຜົນທີ່ເຮົາຂ້ຽນຕີ, ພິພາກສາ ແລະ ຕຳນິຕິເຕືອນເຈົ້າທຸກມື້ແມ່ນຍ້ອນເຮົາກຽດຊັງເຈົ້າ. ແຕ່ເຖິງແມ່ນວ່າ ສິ່ງທີ່ເຈົ້າໄດ້ທົນທຸກແມ່ນການຂ້ຽນຕີ ແລະ ການພິພາກສາ, ແຕ່ໃນຄວາມເປັນຈິງແລ້ວ ສິ່ງນີ້ແມ່ນຄວາມຮັກສຳລັບເຈົ້າ ແລະ ມັນຄືການປົກປ້ອງອັນຍິ່ງໃຫຍ່ທີ່ສຸດ. ຖ້າເຈົ້າບໍ່ສາມາດເຂົ້າໃຈຄວາມໝາຍຂອງພາລະກິດນີ້ຢ່າງເລິກເຊິ່ງຍິ່ງຂຶ້ນ, ມັນກໍຈະເປັນໄປບໍ່ໄດ້ທີ່ເຈົ້າຈະສືບຕໍ່ມີປະສົບການ. ຄວາມລອດພົ້ນນີ້ຄວນນຳຄວາມສະບາຍໃຈມາສູ່ເຈົ້າ. ຢ່າປະຕິເສດທີ່ຈະມີສະຕິ. ເມື່ອໄດ້ມາໄກປານນີ້ແລ້ວ ຄວາມສຳຄັນຂອງພາລະກິດແຫ່ງການເອົາຊະນະກໍຄວນເປັນທີ່ຊັດເຈນຕໍ່ເຈົ້າ ແລະ ເຈົ້າບໍ່ຄວນຍຶດຖືຄວາມຄິດເຫັນກ່ຽວກັບມັນໃນທາງໃດທາງໜຶ່ງອີກຕໍ່ໄປ!

# ການປະຕິບັດ (6)

ໃນປັດຈຸບັນ ບໍ່ຕ້ອງສົນໃຈຄວາມຮູ້ສຶກທີ່ເປໂຕມີ, ຫຼາຍຄົນບໍ່ສາມາດແມ່ນແຕ່ທີ່ຈະບັນລຸຄວາມຮູ້ສຶກທີ່ໂປໂລມີ. ພວກເຂົາບໍ່ມີແມ່ນແຕ່ການຮູ້ຈັກຕົນເອງຂອງໂປໂລ. ເຖິງແມ່ນໂປໂລຖືກຕີໃຫ້ລົ້ມລົງໂດຍພຣະຜູ້ເປັນເຈົ້າ ຍ້ອນເພິ່ນຂົ່ມເຫັງພຣະເຢຊູເຈົ້າ, ຕໍ່ມາ ເພິ່ນກໍມີຄວາມເດັດດ່ຽວທີ່ຈະປະຕິບັດພາລະກິດ ແລະ ທົນທຸກເພື່ອພຣະຜູ້ເປັນເຈົ້າ. ພຣະເຢຊູມອບຄວາມເຈັບປ່ວຍໃຫ້ກັບເພິ່ນ ແລະ ຫຼັງຈາກນັ້ນ ໂປໂລກໍສືບຕໍ່ທົນທຸກກັບຄວາມເຈັບປ່ວຍນີ້ຫຼັງຈາກທີ່ເພິ່ນເລີ່ມຕົ້ນປະຕິບັດພາລະກິດ. ເປັນຫຍັງເພິ່ນຈຶ່ງເວົ້າວ່າເພິ່ນມີໜາມໃນເນື້ອໜັງຂອງເພິ່ນ? ໃນຄວາມເປັນຈິງແລ້ວ ໜາມແມ່ນຄວາມເຈັບປ່ວຍ ແລະ ສຳລັບໂປໂລແລ້ວ ມັນຄືຄວາມອ່ອນແອທີ່ຮ້າຍແຮງ. ບໍ່ວ່າເພິ່ນໄດ້ປະຕິບັດພາລະກິດຫຼາຍສໍ່າໃດກໍຕາມ ຫຼື ເພິ່ນມີຄວາມເດັດດ່ຽວທີ່ຈະທົນທຸກຫຼາຍສໍ່າໃດກໍຕາມ, ເພິ່ນກໍບໍ່ສາມາດກຳຈັດໜາມນັ້ນອອກໄດ້. ແຕ່ໂປໂລກໍມີຄວາມສາມາດທີ່ດີກວ່າພວກເຈົ້າທຸກຄົນທີ່ຢູ່ໃນປັດຈຸບັນນີ້ຫຼາຍ ແລະ ເພິ່ນຍັງຮູ້ຈັກຕົນເອງ ແລະ ມີຄວາມສຳນຶກຫຼາຍກວ່າພວກເຈົ້າ. ຫຼັງຈາກທີ່ໂປໂລຖືກພຣະເຢຊູຕີໃຫ້ລົ້ມລົງ, ເພິ່ນກໍເຊົາຂົ່ມເຫັງສາວົກຂອງພຣະເຢຊູ ແລະ ເລີ່ມຕົ້ນເທດສະໜາ ແລະ ທົນທຸກເພື່ອພຣະເຢຊູ. ແລ້ວແມ່ນຫຍັງທີ່ດົນໃຈໃຫ້ເພິ່ນອົດທົນຕໍ່ການທົນທຸກກັບສິ່ງນັ້ນ? ໂປໂລເຊື່ອວ່າ ຍ້ອນເພິ່ນໄດ້ເຫັນແສງສະຫວ່າງທີ່ຍິ່ງໃຫຍ່, ເພິ່ນຈຶ່ງຕ້ອງເປັນພະຍານໃຫ້ກັບພຣະເຢຊູເຈົ້າ, ຕ້ອງບໍ່ຂົ່ມເຫັງສາວົກຂອງພຣະເຢຊູອີກຕໍ່ໄປ ແລະ ຕ້ອງບໍ່ຕໍ່ຕ້ານພາລະກິດຂອງພຣະເຈົ້າອີກຕໍ່ໄປ. ໂປໂລເປັນໜຶ່ງໃນບຸກຄົນຊັ້ນສູງຂອງສາສະໜາ. ເພິ່ນມີຄວາມຮູ້ ແລະ ມີພອນສະຫວັນ, ເພິ່ນດູຖູກຄົນທົ່ວໄປ ແລະ ມີບຸກຄະລິກທີ່ເຂັ້ມແຂງກວ່າຄົນສ່ວນໃຫຍ່. ແຕ່ຫຼັງຈາກທີ່ "ແສງສະຫວ່າງທີ່ຍິ່ງໃຫຍ່" ສ່ອງມາໃສ່ເພິ່ນ, ເພິ່ນຈຶ່ງສາມາດປະຕິບັດພາລະກິດເພື່ອພຣະເຢຊູເຈົ້າ, ຕັ້ງໃຈທົນທຸກເພື່ອພຣະເຈົ້າ ແລະ ຖວາຍຕົນເອງໃຫ້ກັບພຣະເຈົ້າ ເຊິ່ງພິສູດໃຫ້ເຫັນວ່າເພິ່ນມີຄວາມສຳນຶກ. ໃນເວລານັ້ນ ເພິ່ນກຳລັງຂົ່ມເຫັງ ແລະ ຈັບກຸມສາວົກຂອງພຣະເຢຊູ, ພຣະເຢຊູປາກົດຕົວຕໍ່ເພິ່ນ ແລະ ກ່າວວ່າ "ໂປໂລ ເປັນຫຍັງເຈົ້າຈຶ່ງຂົ່ມເຫັງເຮົາ?" ໂປໂລກົ້ມລົງທັນທີ ແລະ ເວົ້າວ່າ "ພຣະອົງແມ່ນໃຜ, ພຣະຜູ້ເປັນເຈົ້າ?" ສຽງມາຈາກທ້ອງຟ້າເວົ້າວ່າ "ເຮົາຄືພຣະເຢຊູ ຜູ້ທີ່ເຈົ້າຂົ່ມເຫັງ". ທັນໃດນັ້ນ ໂປໂລກໍຕື່ນຂຶ້ນ ແລະ ເມື່ອນັ້ນ ເພິ່ນຈຶ່ງຮູ້ວ່າພຣະເຢຊູເປັນພຣະຄຣິດ, ພຣະອົງເປັນພຣະເຈົ້າ. "ຂ້ານ້ອຍຕ້ອງເຊື່ອຟັງ. ພຣະເຈົ້າໄດ້ມອບຄວາມກະລຸນານີ້ໃຫ້ກັບຂ້ານ້ອຍ, ປານນັ້ນ ຂ້ານ້ອຍກໍຍັງຂົ່ມເຫັງພຣະອົງ, ແຕ່ພຣະອົງກໍບໍ່ໄດ້ໂຈມຕີໃຫ້ຂ້ານ້ອຍລົ້ມລົງ ຫຼື ພຣະອົງບໍ່ໄດ້ສາບແຊ່ງຂ້ານ້ອຍເລີຍ. ຂ້ານ້ອຍຕ້ອງທົນທຸກເພື່ອພຣະອົງ". ໂປໂລຮູ້ວ່າເພິ່ນໄດ້ຂົ່ມເຫັງພຣະເຢຊູຄຣິດເຈົ້າ ແລະ ກຳລັງຂ້າສາວົກຂອງພຣະອົງໃນຕອນນີ້, ພຣະເຈົ້າບໍ່ໄດ້ສາບແຊ່ງເພິ່ນ, ແຕ່ສ່ອງແສງສະຫວ່າງໃຫ້ກັບເພິ່ນ. ສິ່ງນີ້ດົນໃຈເພິ່ນ ແລະ ເພິ່ນກໍເວົ້າວ່າ "ເຖິງແມ່ນຂ້ານ້ອຍບໍ່ໄດ້ເຫັນໜ້າຂອງພຣະອົງ, ຂ້ານ້ອຍກໍໄດ້ຍິນສຽງຂອງພຣະອົງ ແລະ ໄດ້ເຫັນແສງສະຫວ່າງທີ່ຍິ່ງໃຫຍ່ຂອງພຣະອົງ. ພຽງຕອນນີ້ ຂ້ານ້ອຍຈຶ່ງເຫັນຢ່າງແທ້ຈິງວ່າ ພຣະເຈົ້າຮັກຂ້ານ້ອຍຢ່າງແທ້ຈິງ ແລະ ພຣະເຢຊູຄຣິດເຈົ້າເປັນພຣະເຈົ້າທີ່ມີຄວາມເມດຕາຕໍ່ມະນຸດ ແລະ

ຍົກໂທດຄວາມຜິດບາບຂອງມະນຸດຕະຫຼອດໄປຢ່າງແທ້ຈິງ. ຂ້ານ້ອຍເຫັນຢ່າງແທ້ຈິງວ່າ ຂ້ານ້ອຍເປັນຄົນບາບ". ເຖິງຢ່າງໃດກໍຕາມ ຫຼັງຈາກນັ້ນ ພຣະເຈົ້າກໍໃຊ້ພອນສະຫວັນຂອງໂປໂລເພື່ອປະຕິບັດພາລະກິດ, ຕອນນີ້ໃຫ້ລືມສິ່ງນີ້ໄປກ່ອນ. ຄວາມເດັດດ່ຽວຂອງເພິ່ນໃນເວລານັ້ນ, ຄວາມສຳນຶກຂອງມະນຸດທີ່ປົກກະຕິຂອງເພິ່ນ ແລະ ການຮູ້ຈັກຕົນເອງຂອງເພິ່ນ, ພວກເຈົ້າບໍ່ສາມາດບັນລຸສິ່ງເຫຼົ່ານີ້ໄດ້. ໃນປັດຈຸບັນ, ພວກເຈົ້າບໍ່ໄດ້ຮັບແສງສະຫວ່າງຢ່າງຫຼວງຫຼາຍບໍ? ຫຼາຍຄົນບໍ່ໄດ້ເຫັນບໍວ່າ ອຸປະນິໄສຂອງພຣະເຈົ້າແມ່ນອຸປະນິໄສແຫ່ງຄວາມສະຫງ່າງາມ, ຄວາມໂກດຮ້າຍ, ການພິພາກສາ ແລະ ການຕີສອນ? ການສາບແຊ່ງ, ການທົດລອງ ແລະ ການຫຼໍ່ຫຼອມໄດ້ເກີດຂຶ້ນກັບຜູ້ຄົນຫຼາຍຄັ້ງ, ແລ້ວພວກເຂົາໄດ້ຮຽນຮູ້ຫຍັງແດ່? ເຈົ້າໄດ້ຮັບຫຍັງແດ່ຈາກການຖືກລົງວິໄນ ແລະ ການຖືກຈັດການ? ພຣະທຳທີ່ຮຸນແຮງ, ການຂ້ຽນຕີ ແລະ ການພິພາກສາໄດ້ເກີດຂຶ້ນກັບເຈົ້າເປັນເວລາຫຼາຍຄັ້ງ, ແຕ່ເຈົ້າກໍບໍ່ໄດ້ສົນໃຈໃນສິ່ງເຫຼົ່ານັ້ນ. ເຈົ້າບໍ່ມີຄວາມສຳນຶກຄືກັບທີ່ໂປໂລມີແມ່ນແຕ່ໜ້ອຍດຽວ, ເຈົ້າບໍ່ຫຼ້າຫຼັງທີ່ສຸດບໍ? ຍັງມີຫຼາຍສິ່ງທີ່ໂປໂລບໍ່ໄດ້ເຫັນຢ່າງຊັດເຈນ. ເພິ່ນພຽງແຕ່ຮູ້ຈັກວ່າແສງສະຫວ່າງໄດ້ສ່ອງລົງມາໃສ່ເພິ່ນ, ແຕ່ບໍ່ຮູ້ວ່າເພິ່ນຖືກໂຈມຕີໃຫ້ລົ້ມລົງ; ເພິ່ນເຊື່ອເປັນການສ່ວນຕົວວ່າ ຫຼັງຈາກທີ່ແສງສະຫວ່າງໄດ້ສ່ອງລົງມາໃສ່ເພິ່ນ, ເພິ່ນຕ້ອງສະຫຼະຕົນເອງເພື່ອພຣະເຈົ້າ, ທົນທຸກເພື່ອພຣະເຈົ້າ, ເຮັດທຸກສິ່ງເພື່ອປູທາງໃຫ້ກັບພຣະເຢຊູຄຣິດເຈົ້າ ແລະ ຮັບເອົາຄົນບາບຫຼາຍຂຶ້ນເພື່ອພວກເຂົາຈະໄດ້ຖືກໄຖ່ໂດຍພຣະຜູ້ເປັນເຈົ້າ. ສິ່ງນີ້ແມ່ນຄວາມເດັດດ່ຽວຂອງເພິ່ນ ແລະ ຈຸດປະສົງດຽວຂອງພາລະກິດຂອງເພິ່ນ, ແຕ່ເມື່ອເພິ່ນປະຕິບັດພາລະກິດ, ໂລກໄພໄຂ້ເຈັບກໍຍັງບໍ່ໄດ້ໄປຈາກເພິ່ນ, ໂປໂລປະຕິບັດພາລະກິດຫຼາຍກວ່າຊາວປີ ຈົນເພິ່ນຕາຍ. ເພິ່ນທົນທຸກຫຼາຍຢ່າງ ແລະ ຜະເຊີນກັບການຂົ່ມເຫັງຢ່າງຮຸນແຮງ ແລະ ຄວາມລຳບາກຍາກແຄ້ນຫຼາຍຢ່າງ, ເຖິງຢ່າງໃດກໍຕາມ ສິ່ງເຫຼົ່ານີ້ແມ່ນໜ້ອຍກວ່າການທົດລອງຂອງເປໂຕຢ່າງແນ່ນອນ. ມັນເປັນຕາສົມເພດຫຼາຍສໍ່າໃດຖ້າພວກເຈົ້າບໍ່ມີແມ່ນແຕ່ຄວາມສຳນຶກຂອງໂປໂລ? ເມື່ອເປັນເຊັ່ນນີ້, ພຣະເຈົ້າຈະສາມາດເລີ່ມຕົ້ນພາລະກິດທີ່ໃຫຍ່ຂຶ້ນໃນພວກເຈົ້າໄດ້ແນວໃດ?

ເມື່ອເພິ່ນເຜີຍແຜ່ຂ່າວປະເສີດ, ໂປໂລໄດ້ທົນທຸກກັບການທໍລະມານຢ່າງໜັກ. ພາລະກິດທີ່ເພິ່ນປະຕິບັດ, ຄວາມເດັດດ່ຽວຂອງເພິ່ນ, ຄວາມເຊື່ອຂອງເພິ່ນ, ຄວາມຊື່ສັດ, ຄວາມຮັກ, ຄວາມອົດທົນ ແລະ ຄວາມຖ່ອມຕົນໃນເວລານັ້ນ ແລະ ສິ່ງຕ່າງໆອີກຫຼາຍຢ່າງທີ່ຢູ່ພາຍນອກທີ່ເພິ່ນດຳລົງຊີວິດຕາມ, ແມ່ນສູງສົ່ງກວ່າພວກເຈົ້າທຸກຄົນໃນປັດຈຸບັນ. ຖ້າທີ່ຈະເວົ້າຢ່າງເຄັ່ງຄັດກວ່ານີ້ ພາຍໃນຕົວເຈົ້າແມ່ນບໍ່ມີຈິດສຳນຶກທີ່ປົກກະຕິ; ພວກເຈົ້າບໍ່ມີແມ່ນແຕ່ຄວາມສຳນຶກ ຫຼື ຄວາມເປັນມະນຸດເລີຍ. ພວກເຈົ້າຂາດເຂີນຫຼາຍຢ່າງ! ສະນັ້ນ ໃນເວລາສ່ວນໃຫຍ່ແລ້ວຈຶ່ງບໍ່ມີຄວາມຮູ້ສຶກທີ່ປົກກະຕິໃຫ້ຄົ້ນພົບໃນສິ່ງທີ່ພວກເຈົ້າດຳລົງຊີວິດຕາມ ແລະ ບໍ່ມີສັນຍານແຫ່ງການຮູ້ຈັກຕົນເອງ. ເຖິງແມ່ນເພິ່ນໄດ້ທົນທຸກກັບຄວາມເຈັບປ່ວຍທາງຮ່າງກາຍໃນເວລານັ້ນ, ເພິ່ນກໍສືບຕໍ່ອະທິຖານ ແລະ ສະແຫວງຫາ: "ແມ່ນຫຍັງຄືຄວາມເຈັບປ່ວຍນີ້ກັນແທ້? ຂ້ານ້ອຍໄດ້ປະຕິບັດພາລະກິດທັງໝົດນີ້ເພື່ອພຣະຜູ້ເປັນເຈົ້າ, ເປັນຫຍັງຄວາມທຸກທໍລະມານນີ້ຈຶ່ງບໍ່ໜີຈາກຂ້ານ້ອຍໄປ? ມັນເປັນໄປໄດ້ບໍວ່າ ພຣະເຢຊູເຈົ້າກຳລັງທົດສອບ

ຂ້ານ້ອຍ? ພຣະອົງໄດ້ຂ້ຽນຕີຂ້ານ້ອຍໃຫ້ລົ້ມລົງບໍ? ຖ້າພຣະອົງໄດ້ຕີຂ້ານ້ອຍໃຫ້ລົ້ມລົງ, ຂ້ານ້ອຍກໍຄົງຈະຕາຍແລ້ວ ແລະ ບໍ່ສາມາດປະຕິບັດພາລະກິດທັງໝົດນີ້ເພື່ອພຣະອົງໄດ້ ຫຼື ຂ້ານ້ອຍຈະບໍ່ສາມາດຮັບເອົາແສງສະຫວ່າງຢ່າງຫຼວງຫຼາຍແບບນີ້ໄດ້. ພຣະອົງຍັງເຂົ້າໃຈເຖິງຄວາມຕັ້ງໃຈຂອງຂ້ານ້ອຍ". ໂປໂລຮູ້ສຶກຢູ່ສະເໝີວ່າຄວາມເຈັບປ່ວຍຂອງເພິ່ນກໍຄືການທີ່ພຣະເຈົ້າກຳລັງທົດສອບເພິ່ນ, ມັນຄືການ ເຮັດໃຫ້ຄວາມເຊື່ອ ແລະ ກຳລັງໃຈຂອງເພິ່ນເຂັ້ມແຂງຂຶ້ນ, ນີ້ແມ່ນວິທີທີ່ໂປໂລເບິ່ງສິ່ງນັ້ນ. ໃນຄວາມເປັນຈິງແລ້ວ, ຄວາມເຈັບປ່ວຍຂອງເພິ່ນແມ່ນຜົນມາຈາກການໂຈມຕີຂອງພຣະເຢຊູເຈົ້າ. ມັນເຮັດໃຫ້ເພິ່ນຕົກຢູ່ພາຍໃຕ້ຄວາມກົດດັນຢ່າງເສົ້າໃຈ ແລະ ຕ້ອງໄດ້ຄວບຄຸມຄວາມກະບົດຂອງເພິ່ນ. ຖ້າພວກເຈົ້າພົບຕົນເອງຢູ່ໃນສະຖານະການຂອງໂປໂລ, ພວກເຈົ້າຈະເຮັດແນວໃດ? ຄວາມຕັ້ງໝັ້ນ ແລະ ຄວາມສາມາດຂອງພວກເຈົ້າຈະສາມາດທົນໄດ້ສໍ່າໂປໂລບໍ? ໃນປັດຈຸບັນ, ຖ້າຄວາມເຈັບປ່ວຍບາງຢ່າງເກີດຂຶ້ນກັບພວກເຈົ້າ ຫຼື ພວກເຈົ້າຜະເຊີນກັບການທົດລອງທີ່ຍິ່ງໃຫຍ່ ແລະ ພວກເຈົ້າຖືກເຮັດໃຫ້ທົນທຸກ, ມີໃຜຮູ້ບໍ່ວ່າ ພວກເຈົ້າຈະເປັນແນວໃດ. ຖ້າພວກເຈົ້າຖືກຂັງໃນກົງນົກ ແລະ ຖືກລ້ຽງດູຢູ່ສະເໝີ, ພວກເຈົ້າກໍຈະບໍ່ເປັນຫຍັງ. ບໍ່ດັ່ງນັ້ນ ພວກເຈົ້າກໍຈະເປັນຄືກັບໝາປ່າທີ່ຂາດຄວາມເປັນມະນຸດ. ສະນັ້ນ ເມື່ອພວກເຈົ້າທົນທຸກກັບຂໍ້ຈຳກັດ ຫຼື ຄວາມລຳບາກເລັກນ້ອຍ, ມັນກໍດີສຳລັບພວກເຈົ້າ; ຖ້າພວກເຈົ້າໄດ້ຮັບຄວາມສະບາຍ ພວກເຈົ້າກໍຈະຖືກທຳລາຍ ແລະ ແລ້ວພວກເຈົ້າຈະສາມາດຖືກປົກປ້ອງໄດ້ແນວໃດ? ໃນປັດຈຸບັນ, ມັນເປັນຍ້ອນພວກເຈົ້າຖືກຂ້ຽນຕີ, ພິພາກສາ ແລະ ສາບແຊ່ງ, ພວກເຈົ້າຈຶ່ງໄດ້ຮັບການປົກປ້ອງ. ມັນເປັນຍ້ອນພວກເຈົ້າໄດ້ທົນທຸກຫຼາຍຢ່າງ, ພວກເຈົ້າຈຶ່ງຖືກປົກປ້ອງ. ຖ້າບໍ່ດັ່ງນັ້ນ, ພວກເຈົ້າກໍຄົງຈະຕົກລົງສູ່ຄວາມເສື່ອມຊາມຕັ້ງແຕ່ດົນແລ້ວ. ນີ້ບໍ່ແມ່ນເຈດຕະນາສ້າງຄວາມຫຍຸ້ງຍາກໃຫ້ກັບພວກເຈົ້າ, ທຳມະຊາດຂອງມະນຸດແມ່ນປ່ຽນແປງໄດ້ຍາກ ແລະ ມັນຕ້ອງເຮັດແບບນີ້ເພື່ອເຮັດໃຫ້ອຸປະນິໄສຂອງພວກເຂົາປ່ຽນແປງ. ໃນປັດຈຸບັນ, ພວກເຈົ້າບໍ່ມີແມ່ນແຕ່ຄວາມສຳນຶກ ຫຼື ຄວາມຮູ້ສຶກທີ່ໂປໂລມີ ຫຼື ພວກເຈົ້າບໍ່ມີແມ່ນແຕ່ການຮູ້ຈັກຕົນເອງຂອງເພິ່ນ. ພວກເຈົ້າຕ້ອງຖືກກົດດັນຢູ່ສະເໝີ ແລະ ພວກເຈົ້າຕ້ອງຖືກຂ້ຽນຕີ ແລະ ພິພາກສາຢູ່ສະເໝີເພື່ອປຸກວິນຍານຂອງພວກເຈົ້າ. ການຂ້ຽນຕີ ແລະ ການພິພາກສາແມ່ນສິ່ງທີ່ດີທີ່ສຸດສຳລັບຊີວິດຂອງພວກເຈົ້າ. ແລ້ວເມື່ອຈຳເປັນ, ພວກເຈົ້າກໍຍັງຕ້ອງໄດ້ຮັບການຂ້ຽນຕີແຫ່ງຄວາມຈິງອີກດ້ວຍ; ມີພຽງເມື່ອນັ້ນພວກເຈົ້າຈຶ່ງຈະຍອມຢ່າງສົມບູນ. ທຳມະຊາດຂອງພວກເຈົ້າເປັນແບບຄືກັບວ່າ ຖ້າບໍ່ມີການຂ້ຽນຕີ ແລະ ການສາບແຊ່ງ, ພວກເຈົ້າຈະບໍ່ເຕັມໃຈກົ້ມຫົວຂອງພວກເຈົ້າ, ບໍ່ເຕັມໃຈທີ່ຈະຍອມຮັບ. ຫາກບໍ່ມີຄວາມຈິງຢູ່ຕໍ່ຕາຂອງພວກເຈົ້າ, ມັນກໍຈະບໍ່ມີຜົນຫຍັງ. ພວກເຈົ້າມີລັກສະນະທີ່ຕໍ່າຕ້ອຍ ແລະ ໄຮ້ຄ່າເກີນໄປ! ຫາກປາສະຈາກການຂ້ຽນຕີ ແລະ ການພິພາກສາ, ມັນກໍຈະຍາກສຳລັບພວກເຈົ້າທີ່ຈະຖືກເອົາຊະນະ ແລະ ຍາກທີ່ຈະເອົາຊະນະຄວາມບໍ່ຊອບທຳ ແລະ ຄວາມບໍ່ເຊື່ອຟັງຂອງພວກເຈົ້າ. ທຳມະຊາດດັ້ງເດີມຂອງພວກເຈົ້າແມ່ນຖືກຝັງເລິກຫຼາຍ. ຖ້າພວກເຈົ້າຖືກວາງຢູ່ເທິງບັນລັງ, ພວກເຈົ້າກໍຈະບໍ່ຮູ້ຈັກເຖິງຄວາມສູງຂອງສະຫວັນ ແລະ ຄວາມເລິກຂອງແຜ່ນດິນໂລກ, ແຮງໄກທີ່ຈະຮູ້ຈັກເຖິງບ່ອນທີ່ພວກເຈົ້າກຳລັງໄປ. ພວກເຈົ້າບໍ່ຮູ້ຈັກແມ່ນແຕ່ວ່າພວກເຈົ້າມາຈາກໃສ, ແລ້ວພວກເຈົ້າຈະ

ຮູ້ຈັກພຣະຜູ້ເປັນເຈົ້າແຫ່ງການເນລະມິດສ້າງໄດ້ແນວໃດ? ຖ້າປາສະຈາກການຂ້ຽນຕີ ແລະ ການສາບແຊ່ງຕາມການເວລາໃນປັດຈຸບັນ, ມື້ສຸດທ້າຍຂອງພວກເຈົ້າກໍຈະມາເຖິງຕັ້ງແຕ່ດົນແລ້ວ. ນັ້ນບໍ່ໄດ້ເວົ້າເຖິງໂຊກຊະຕາຂອງພວກເຈົ້າເລີຍ, ແລ້ວມັນຈະບໍ່ຢູ່ໃນອັນຕະລາຍຫຼາຍກວ່າເກົ່າບໍ? ຫາກປາສະຈາກການຂ້ຽນຕີ ແລະ ການພິພາກສາຕາມການເວລາດັ່ງກ່າວນີ້, ຜູ້ໃດຈະຮູ້ຈັກວ່າ ພວກເຈົ້າອວດດີຫຼາຍສໍ່າໃດ ຫຼື ພວກເຈົ້າຈະຊົ່ວຊ້າຫຼາຍສໍ່າໃດ. ການຂ້ຽນຕີ ແລະ ການພິພາກສານີ້ໄດ້ນໍາພາພວກເຈົ້າມາເຖິງປັດຈຸບັນ ແລະ ສິ່ງເຫຼົ່ານັ້ນໄດ້ຮັກສາການເປັນຢູ່ຂອງພວກເຈົ້າ. ຖ້າພວກເຈົ້າຍັງມີ "ການສຶກສາ" ແລ້ວໃຊ້ວິທີການດຽວກັນກັບ "ພໍ່" ຂອງພວກເຈົ້າ, ຜູ້ໃດຈະຮູ້ຈັກວ່າ ພວກເຈົ້າຈະເຂົ້າສູ່ຂອບເຂດໃດ! ພວກເຈົ້າບໍ່ມີຄວາມສາມາດທີ່ຈະຄວບຄຸມ ແລະ ໄຕ່ຕອງກ່ຽວກັບຕົນເອງເລີຍ. ສໍາລັບຄົນຄືພວກເຈົ້າແລ້ວ, ຖ້າພວກເຈົ້າພຽງແຕ່ຕິດຕາມ ແລະ ເຊື່ອຟັງໂດຍບໍ່ມີການແຊກແຊງ ຫຼື ການຂັດຂວາງໃດໆ, ຈຸດປະສົງຂອງເຮົາກໍຈະຖືກບັນລຸແລ້ວ. ມັນຈະບໍ່ດີກວ່າບໍ ທີ່ພວກເຈົ້າຍອມຮັບເອົາການຂ້ຽນຕີ ແລະ ການພິພາກສາແຫ່ງປັດຈຸບັນ? ພວກເຈົ້າມີທາງເລືອກຫຍັງອີກ? ເມື່ອໂປໂລເຫັນພຣະເຢຊູເຈົ້າກໍາລັງກ່າວ ແລະ ປະຕິບັດພາລະກິດ, ເພິ່ນກໍຍັງບໍ່ເຊື່ອ. ຕໍ່ມາ ຫຼັງຈາກທີ່ພຣະເຢຊູເຈົ້າຖືກຄຶງໃສ່ໄມ້ກາງແຂນ ແລະ ຟື້ນຄືນມາໃໝ່, ເພິ່ນຈຶ່ງຮູ້ຈັກຄວາມຈິງນີ້, ແຕ່ເພິ່ນກໍສືບຕໍ່ຂົ່ມເຫັງ ແລະ ຕໍ່ຕ້ານພຣະອົງ. ນີ້ແມ່ນຄວາມໝາຍຂອງການເຮັດບາບຢ່າງດື້ດ້ານ ແລະ ດ້ວຍເຫດນັ້ນ ເພິ່ນຈຶ່ງຖືກຕີໃຫ້ລົ້ມລົງ. ໃນຕອນເລີ່ມຕົ້ນນັ້ນ, ເພິ່ນຮູ້ວ່າມີກະສັດທ່າມກາງຊາວຢິວ ທີ່ຖືກເອີ້ນວ່າ ພຣະເຢຊູ, ເພິ່ນໄດ້ຍິນກ່ຽວກັບສິ່ງນີ້. ຕໍ່ມາ ໃນຂະນະທີ່ເພິ່ນເທດສະໜາໃນພຣະວິຫານ ແລະ ເທດສະໜາທົ່ວດິນແດນ, ເພິ່ນກໍຕໍ່ຕ້ານພຣະເຢຊູ, ປະຕິເສດທີ່ຈະເຊື່ອຟັງມະນຸດຄົນໃດໜຶ່ງຢ່າງທະນົງຕົວ. ສິ່ງເຫຼົ່ານີ້ໄດ້ກາຍມາເປັນອຸປະສັກຢ່າງໃຫຍ່ຫຼວງໃນການປະຕິບັດພາລະກິດໃນເວລານັ້ນ. ເມື່ອພຣະເຢຊູກໍາລັງປະຕິບັດພາລະກິດ, ໂປໂລແມ່ນບໍ່ໄດ້ຂົ່ມເຫັງ ແລະ ຈັບກຸມຜູ້ຄົນໂດຍກົງ, ແຕ່ເພິ່ນໃຊ້ການເທດສະໜາ ແລະ ຄໍາເວົ້າເພື່ອທໍາລາຍພາລະກິດຂອງພຣະເຢຊູ. ຕໍ່ມາ ຫຼັງຈາກທີ່ພຣະເຢຊູຄຣິດຖືກຄຶງໃສ່ໄມ້ກາງແຂນ, ເພິ່ນກໍເລີ່ມຈັບກຸມສາວົກ, ຟ້າວແລ່ນໄປບ່ອນນັ້ນບ່ອນນີ້ ແລະ ເຮັດທຸກສິ່ງທີ່ເພິ່ນສາມາດເຮັດໄດ້ເພື່ອຂົ່ມເຫັງພວກເຂົາ. ພຽງແຕ່ຫຼັງຈາກ "ແສງສະຫວ່າງ" ໄດ້ສ່ອງມາໃສ່ເພິ່ນ, ເພິ່ນຈຶ່ງຕື່ນຂຶ້ນ ແລະ ພົບກັບຄວາມເສຍໃຈຢ່າງໃຫຍ່. ຫຼັງຈາກທີ່ເພິ່ນຖືກໂຈມຕີ, ຄວາມເຈັບປ່ວຍຂອງເພິ່ນກໍບໍ່ເຄີຍໜີຈາກເພິ່ນເລີຍ. ບາງຄັ້ງ, ເພິ່ນຮູ້ສຶກວ່າຄວາມທຸກທໍລະມານຂອງເພິ່ນຍິ່ງຮ້າຍແຮງຂຶ້ນ ແລະ ບໍ່ສາມາດລຸກອອກຈາກຕຽງນອນໄດ້. ເພິ່ນຄິດວ່າ "ແມ່ນຫຍັງກໍາລັງເກີດຂຶ້ນ? ຂ້ານ້ອຍຖືກໂຈມຕີແທ້ບໍ?" ຄວາມເຈັບປ່ວຍແມ່ນບໍ່ເຄີຍໜີຈາກເພິ່ນເລີຍ ແລະ ມັນເປັນຍ້ອນຄວາມເຈັບປ່ວຍນີ້ ເພິ່ນຈຶ່ງປະຕິບັດພາລະກິດໜັກກວ່າເກົ່າ. ສາມາດເວົ້າໄດ້ວ່າ ພຣະເຢຊູໄດ້ໃສ່ຄວາມເຈັບປ່ວຍນີ້ເຂົ້າໃນໂປໂລຍ້ອນຄວາມອວດດີ ແລະ ຄວາມດື້ດ້ານຂອງເພິ່ນ; ມັນເປັນການລົງໂທດໂປໂລ, ແຕ່ມັນຍັງເປັນການໃຊ້ພອນສະຫວັນຂອງໂປໂລໃນພາລະກິດຂອງພຣະເຈົ້າ, ເພື່ອວ່າພາລະກິດຂອງພຣະອົງຈະສາມາດຂະຫຍາຍຕົວໄດ້. ທີ່ຈິງແລ້ວ, ມັນບໍ່ແມ່ນເຈດຕະນາຂອງພຣະເຈົ້າທີ່ຊ່ວຍໂປໂລໃຫ້ລອດພົ້ນ, ແຕ່ເປັນການໃຊ້ເພິ່ນ. ແຕ່ອຸປະນິໄສຂອງໂປໂລແມ່ນອວດດີ ແລະ ດື້ດ້ານເກີນໄປ ແລະ ດ້ວຍເຫດນັ້ນ "ໜາມ"

ຈຶ່ງຖືກຝັງໃສ່ໃນຕົວເພິ່ນ. ໃນທີ່ສຸດ, ເມື່ອເວລາໂປໂລສຳເລັດພາລະກິດຂອງເພິ່ນ, ຄວາມເຈັບປ່ວຍກໍບໍ່ໄດ້ທໍລະມານເພິ່ນອີກຕໍ່ໄປ ແລະ ໃນເວລາພາລະກິດຂອງເພິ່ນສິ້ນສຸດລົງ ເພິ່ນຈຶ່ງສາມາດເວົ້າວ່າ "ເຮົາໄດ້ຕໍ່ສູ້ຢ່າງກ້າຫານ, ເຮົາໄດ້ສຳເລັດການແຂ່ງຂັນ, ເຮົາໄດ້ຕັ້ງໝັ້ນໃນຄວາມເຊື່ອ: ຈາກນີ້ເປັນຕົ້ນໄປມີການຈັດກຽມມົງກຸດແຫ່ງຄວາມຊອບທຳໄວ້ໃຫ້ກັບເຮົາແລ້ວ", ເພິ່ນເວົ້າແບບນັ້ນກໍຍ້ອນວ່າເພິ່ນບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ. ມີຫຼາຍຄົນທ່າມກາງພວກເຈົ້າທີ່ເປັນຄືກັບໂປໂລ, ແຕ່ຖ້າພວກເຈົ້າມີຄວາມເດັດດ່ຽວທີ່ຈະຕິດຕາມຈົນເຖິງປາຍທາງຢ່າງແທ້ຈິງ, ພວກເຈົ້າກໍຈະບໍ່ຖືກປະຕິບັດນຳຢ່າງຜິດໆ. ພວກເຮົາຈະບໍ່ສົນທະນາກ່ຽວກັບວິທີທີ່ໂປໂລກະບົດ ແລະ ຕໍ່ຕ້ານໃນນີ້; ໃຫ້ພວກເຂົາເວົ້າເຖິງສ່ວນທີ່ດີ ແລະ ສ່ວນທີ່ເປັນຕາຍົກຍ້ອງຂອງເພິ່ນ: ເພິ່ນມີຄວາມສຳນຶກ ແລະ ຫຼັງຈາກທີ່ໄດ້ຮັບ "ແສງສະຫວ່າງ" ພຽງຄັ້ງດຽວ, ເພິ່ນກໍສາມາດອຸທິດຕົນຕໍ່ພຣະເຈົ້າ ແລະ ທົນທຸກເພື່ອພຣະເຈົ້າ. ສິ່ງນີ້ແມ່ນຈຸດແຂງຂອງເພິ່ນ. ເຖິງຢ່າງໃດກໍຕາມ, ຖ້າມີຄົນທີ່ເຊື່ອວ່າ ຍ້ອນເພິ່ນມີຈຸດແຂງ ເພິ່ນຈຶ່ງເປັນຄົນທີ່ໄດ້ຮັບພອນ, ຖ້າພວກເຂົາຄິດວ່າເພິ່ນບໍ່ຈຳເປັນຕ້ອງຖືກຂ້ຽນຕີ, ຄຳເວົ້າເຫຼົ່ານີ້ແມ່ນມາຈາກຄົນທີ່ບໍ່ມີຈິດສຳນຶກ.

ເມື່ອເວລາອະທິຖານ ແລະ ອ່ານພຣະທຳຂອງພຣະເຈົ້າ, ຫຼາຍຄົນເວົ້າວ່າ ພວກເຂົາເຕັມໃຈທີ່ຈະຍອມຮັບພຣະເຈົ້າ, ແຕ່ຫຼັງຈາກນັ້ນ ພວກເຂົາກໍພາກັນລະເລີງຢ່າງລັບໆ ແລະ ບໍ່ຄິດໃສ່ໃຈກ່ຽວກັບສິ່ງນັ້ນເລີຍ. ພຣະທຳຂອງພຣະເຈົ້າຖືກກ່າວຄັ້ງແລ້ວຄັ້ງເລົ່າ, ເປີດເຜີຍແຕ່ລະຊັ້ນ ແລະ ມີພຽງແຕ່ເມື່ອຊັ້ນຕໍ່າສຸດຂອງຜູ້ຄົນຖືກເປີດໂປງ ພວກເຂົາຈຶ່ງຈະ "ພົບສັນຕິສຸກ" ແລະ ຄວາມຈອງຫອງ ແລະ ຄວາມດື້ດ້ານຂອງພວກເຂົາກໍຈະມີໜ້ອຍລົງ, ການອວດດີຢ່າງເຫຼືອທົນກໍຈະໜ້ອຍລົງ. ຍ້ອນສະພາວະຂອງພວກເຈົ້າເປັນດັ່ງທີ່ເປັນໃນປັດຈຸບັນ, ພວກເຈົ້າຈຶ່ງຍັງຕ້ອງຖືກຕີ ແລະ ເປີດໂປງຢ່າງໄຮ້ປານີ ແລະ ຖືກພິພາກສາຢ່າງລະອຽດ, ເພື່ອວ່າພວກເຈົ້າຈະບໍ່ມີໂອກາດໄດ້ຫາຍໃຈ. ສຳລັບພວກເຈົ້າແລ້ວ, ມັນດີກວ່າທີ່ຈະບໍ່ໃຫ້ການຂ້ຽນຕີນ ແລະ ການພິພາກສາຢ່າງຮຸນແຮງຈາກພວກເຈົ້າໄປ ແລະ ບໍ່ໃຫ້ການປະນາມ ແລະ ຄຳສາບແຊ່ງອອກຫ່າງຈາກພວກເຈົ້າ, ເຮັດໃຫ້ພວກເຈົ້າເຫັນວ່າມືແຫ່ງກົດບັນຍັດໃນການບໍລິຫານຂອງພຣະເຈົ້າບໍ່ເຄີຍຈາກພວກເຈົ້າໄປຈັກເທື່ອ. ຄືກັບໃນຍຸກແຫ່ງພຣະບັນຍັດ, ເມື່ອອາໂຣນເຫັນວ່າພຣະເຢໂຮວາບໍ່ເຄີຍຈາກເພິ່ນໄປ (ສິ່ງທີ່ເພິ່ນເຫັນແມ່ນການນຳພາ ແລະ ການປົກປ້ອງຢ່າງສະໝໍ່າສະເໝີຂອງພຣະເຢໂຮວາ; ການນຳພາຂອງພຣະເຈົ້າທີ່ພວກເຈົ້າເຫັນໃນປັດຈຸບັນແມ່ນການຂ້ຽນຕີ, ຄຳສາບແຊ່ງ ແລະ ການພິພາກສາ), ໃນປັດຈຸບັນ ມືແຫ່ງກົດບັນຍັດໃນການບໍລິຫານຂອງພຣະເຢໂຮວາແມ່ນບໍ່ໄດ້ຈາກພວກເຈົ້າໄປເຊັ່ນກັນ. ເຖິງຢ່າງໃດກໍຕາມ ມີສິ່ງໜຶ່ງທີ່ພວກເຈົ້າສາມາດປ່ອຍວາງໄດ້: ບໍ່ວ່າພວກເຈົ້າຈະຕໍ່ຕ້ານ, ກະບົດ ແລະ ຕັດສິນແນວໃດກໍຕາມ, ມັນກໍຈະບໍ່ມີອັນຕະລາຍໃດໆຕໍ່ເນື້ອໜັງຂອງພວກເຈົ້າ. ແຕ່ຖ້າມີຄົນປະພຶດເກີນໄປໃນອຸປະນິໄສຂອງພວກເຂົາ ແລະ ຂັດຂວາງພາລະກິດ, ສິ່ງນີ້ແມ່ນບໍ່ສາມາດຍອມຮັບໄດ້; ມັນມີຂອບເຂດ. ຢ່າລົບກວນ ຫຼື ຂັດຂວາງຊີວິດແຫ່ງຄຣິສຕະຈັກ ແລະ ຢ່າລົບກວນພາລະກິດຂອງພຣະວິນຍານບໍລິສຸດ. ສຳລັບຄົນອື່ນ, ເຈົ້າສາມາດເຮັດຫຍັງກໍໄດ້ຕາມທີ່ເຈົ້າຕ້ອງການ. ຖ້າເຈົ້າເວົ້າວ່າເຈົ້າບໍ່ຕ້ອງການສະແຫວງຫາຊີວິດ ແລະ ປາຖະໜາທີ່ຈະກັບຄືນສູ່ທາງໂລກ, ກໍໃຫ້ຟ້າວໄປໄວໆ! ພວກເຈົ້າສາມາດເຮັດຫຍັງກໍໄດ້ຕາມທີ່

ພວກເຈົ້າປາຖະໜາ ຕາບໃດທີ່ມັນບໍ່ຂັດຂວາງພາລະກິດຂອງພຣະເຈົ້າ. ແຕ່ຍັງມີອີກສິ່ງໜຶ່ງທີ່ເຈົ້າຕ້ອງຮູ້: ໃນທີ່ສຸດແລ້ວ, ຄົນບາບທີ່ດື້ດ້ານເຊັ່ນນັ້ນລ້ວນແລ້ວແຕ່ຈະຖືກກຳຈັດຖິ້ມ. ໃນປັດຈຸບັນ, ເຈົ້າອາດບໍ່ຖືກຕຳນິ, ແຕ່ສຸດທ້າຍແລ້ວ ມີພຽງຄົນສ່ວນໜຶ່ງເທົ່ານັ້ນທີ່ຈະສາມາດເປັນພະຍານ ແລະ ທີ່ເຫຼືອແມ່ນຈະຕົກຢູ່ໃນອັນຕະລາຍໝົດທຸກຄົນ. ຖ້າເຈົ້າບໍ່ປາຖະໜາທີ່ຈະຢູ່ໃນກະແສນີ້, ກໍບໍ່ເປັນຫຍັງ. ຜູ້ຄົນໃນປັດຈຸບັນແມ່ນຖືກປະຕິບັດນຳຢ່າງອົດທົນ; ຖ້າເຈົ້າບໍ່ຢ້ານການຂ້ຽນຕີໃນມື້ອື່ນ ເຮົາກໍຈະບໍ່ຂັດຂວາງເຈົ້າ. ແຕ່ຖ້າເຈົ້າຢູ່ໃນກະແສນີ້, ເຈົ້າຕ້ອງເປັນພະຍານໃຫ້ກັບພຣະເຈົ້າ ແລະ ເຈົ້າຕ້ອງຖືກຂ້ຽນຕີ. ຖ້າເຈົ້າຕ້ອງການປະຕິເສດສິ່ງນັ້ນ ແລະ ກັບຄືນສູ່ທາງໂລກ, ກໍບໍ່ເປັນຫຍັງ, ບໍ່ມີໃຜຈະຢຸດເຈົ້າ! ແຕ່ຖ້າເຈົ້າປະຕິບັດພາລະກິດເພື່ອການທຳລາຍ ແລະ ຂັດຂວາງພາລະກິດຂອງພຣະເຈົ້າ, ເຈົ້າຈະບໍ່ສາມາດໄດ້ຮັບການໃຫ້ອະໄພຢ່າງແນ່ນອນ! ສຳລັບສິ່ງທີ່ຕາຂອງເຈົ້າໄດ້ເຫັນ ແລະ ຫູຂອງເຈົ້າໄດ້ຍິນກ່ຽວກັບການຂ້ຽນຕີຂອງຜູ້ຄົນ ແລະ ການສາບແຊ່ງຄອບຄົວຂອງຜູ້ຄົນນັ້ນ, ມັນມີຂໍ້ຈຳກັດ ແລະ ຂອບເຂດສຳລັບທຸກສິ່ງນີ້. ພຣະວິນຍານບໍລິສຸດບໍ່ປະຕິບັດຕໍ່ສິ່ງຕ່າງໆຢ່າງຖືເບົາ. ອີງຕາມຄວາມບາບທີ່ພວກເຈົ້າໄດ້ກະທຳ, ຖ້າພວກເຈົ້າຕ້ອງຖືກປະຕິບັດນຳ ແລະ ຖືກດຳເນີນການຢ່າງຈິງຈັງອີງຕາມຄວາມບໍ່ຊອບທຳຂອງພວກເຈົ້າເອງ, ຜູ້ໃດໃນບັນດາພວກເຈົ້າທີ່ຈະສາມາດຢູ່ລອດໄດ້? ພວກເຈົ້າທຸກຄົນຈະພົບກັບໄພພິບັດ ແລະ ບໍ່ມີພວກເຈົ້າຄົນໃດທີ່ຈະມີຜົນຕາມມາທີ່ດີໄດ້. ເຖິງຢ່າງໃດກໍຕາມ ໃນປັດຈຸບັນ ຫຼາຍຄົນແມ່ນກຳລັງຖືກປະຕິບັດນຳດ້ວຍຄວາມອົດທົນ. ເຖິງແມ່ນວ່າ ພວກເຈົ້າຈະຕັດສິນ, ກະບົດ ແລະ ຕໍ່ຕ້ານ, ແຕ່ຕາບໃດທີ່ພວກເຈົ້າບໍ່ລົບກວນ, ແລ້ວເຮົາກໍຈະພົບກັບພວກເຈົ້າດ້ວຍຮອຍຍິ້ມ. ຖ້າພວກເຈົ້າກຳລັງສະແຫວງຫາຊີວິດຢ່າງແທ້ຈິງ, ແລ້ວພວກເຈົ້າກໍຕ້ອງຍອມທົນທຸກກັບການຂ້ຽນຕີນີ້ເລັກນ້ອຍ ແລະ ພວກເຈົ້າຕ້ອງອົດທົນຕໍ່ຄວາມເຈັບປວດໃນການປະຖິ້ມສິ່ງທີ່ພວກເຈົ້າມັກເພື່ອໄປຢູ່ເທິງໂຕະຜ່າຕັດ; ເຈົ້າຕ້ອງອົດທົນຕໍ່ຄວາມເຈັບປວດ, ດັ່ງທີ່ເປໂຕຍອມຮັບເອົາການທົດລອງ ແລະ ການທົນທຸກ. ໃນປັດຈຸບັນ ພວກເຈົ້າຢູ່ຕໍ່ໜ້າບັນລັງແຫ່ງການພິພາກສາ. ໃນອະນາຄົດ ພວກເຈົ້າຕ້ອງໄປຢູ່ຕໍ່ໜ້າ "ເຄື່ອງປະຫານຊີວິດ" ເຊິ່ງຈະເປັນເວລາທີ່ພວກເຈົ້າ "ສະຫຼະ" ຕົນເອງ.

ໃນລະຫວ່າງຂັ້ນຕອນສຸດທ້າຍນີ້ຂອງພາລະກິດໃນຍຸກສຸດທ້າຍ, ບາງເທື່ອ ເຈົ້າເຊື່ອວ່າພຣະເຈົ້າຈະບໍ່ທຳລາຍລ້າງເນື້ອໜັງຂອງເຈົ້າ ແລະ ສາມາດເວົ້າໄດ້ວ່າ ເຈົ້າອາດບໍ່ທົນທຸກຕໍ່ຄວາມເຈັບປ່ວຍໃດໆເຖິງແມ່ນເຈົ້າຕໍ່ຕ້ານພຣະອົງ ແລະ ຕັດສິນພຣະອົງ, ແຕ່ເມື່ອພຣະທຳທີ່ເຄັ່ງຄັດຂອງພຣະເຈົ້າມາເຖິງເຈົ້າ, ເມື່ອຄວາມກະບົດ ແລະ ການຕໍ່ຕ້ານຂອງເຈົ້າ ແລະ ໃບໜ້າທີ່ຂີ້ຮ້າຍຂອງເຈົ້າຖືກເປີດໂປງອອກທັງໝົດ, ເຈົ້າຈະບໍ່ສາມາດລີ້ໄດ້. ເຈົ້າຈະພົບວ່າຕົນເອງຕື່ນຕົກໃຈ ແລະ ເຮັດຫຍັງບໍ່ຖືກ. ໃນປັດຈຸບັນ, ພວກເຈົ້າຕ້ອງມີຄວາມສຳນຶກໜ້ອຍໜຶ່ງ. ຢ່າຫຼິ້ນບົດບາດຂອງຄົນຊົ່ວຮ້າຍທີ່ຕໍ່ຕ້ານ ແລະ ກະບົດຕໍ່ພຣະເຈົ້າ. ເຈົ້າຄວນຫັນຫຼັງຂອງເຈົ້າຕໍ່ບັນພະບຸລຸດທີ່ເກົ່າແກ່ຂອງເຈົ້າ; ນີ້ແມ່ນວຸດທິພາວະທີ່ເຈົ້າຄວນມີ ແລະ ນີ້ແມ່ນຄວາມເປັນມະນຸດທີ່ເຈົ້າຄວນມີ. ເຈົ້າບໍ່ສາມາດປ່ອຍວາງຄວາມຄາດຫວັງໃນອະນາຄົດຂອງເຈົ້າເອງ ຫຼື ຄວາມສຸກໃນປັດຈຸບັນຢູ່ສະເໝີ. ພຣະເຈົ້າກ່າວວ່າ: "ຕາບໃດທີ່ພວກເຈົ້າເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອຕິດຕາມເຮົາ ແລະ ສະແຫວງຫາຄວາມຈິງ, ເຮົາຈະ

ເຮັດໃຫ້ພວກເຈົ້າສົມບູນຢ່າງແນ່ນອນ. ຫຼັງຈາກທີ່ພວກເຈົ້າຖືກເຮັດໃຫ້ສົມບູນ, ພວກເຈົ້າຈະມີຈຸດໝາຍປາຍທາງທີ່ສວຍງາມ, ພວກເຈົ້າຈະຖືກນຳພາໄປສູ່ອານາຈັກຂອງເຮົາເພື່ອໄດ້ຮັບພອນກັບເຮົາ". ຈຸດໝາຍປາຍທາງທີ່ສວຍງາມໄດ້ຖືກກຳນົດໄວ້ໃຫ້ພວກເຈົ້າແລ້ວ, ແຕ່ເງື່ອນໄຂຂອງພວກເຈົ້າແມ່ນບໍ່ສາມາດຫຼຸດຜ່ອນລົງໄດ້. ຍັງມີອີກໜຶ່ງເງື່ອນໄຂ: ບໍ່ວ່າພວກເຈົ້າຈະຖືກເອົາຊະນະ ຫຼື ຖືກເຮັດໃຫ້ສົມບູນ, ໃນປັດຈຸບັນ ພວກເຈົ້າຕ້ອງຕົກຢູ່ໃນການຂ້ຽນຕີບາງຢ່າງ ແລະ ການທົນທຸກບາງຢ່າງ; ພວກເຈົ້າຕ້ອງຖືກຂ້ຽນຕີ ແລະ ຖືກລົງວິໄນ; ພວກເຈົ້າຕ້ອງຟັງພຣະທຳຂອງເຮົາ, ຕິດຕາມຫົນທາງຂອງເຮົາ ແລະ ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ, ນີ້ແມ່ນສິ່ງທີ່ພວກເຈົ້າຜູ້ທີ່ເປັນມະນຸດຄວນເຮັດ. ບໍ່ວ່າເຈົ້າຈະສະແຫວງຫາສິ່ງໃດກໍຕາມ, ເຈົ້າຕ້ອງຟັງທາງນີ້ຢ່າງຊັດເຈນ. ຖ້າເຈົ້າມີຄວາມເຂົ້າໃຈຢ່າງແທ້ຈິງ, ແລ້ວເຈົ້າກໍຈະສາມາດສືບຕໍ່ຕິດຕາມໄດ້. ຖ້າເຈົ້າເຊື່ອວ່າ ມັນບໍ່ມີໂອກາດ ຫຼື ຄວາມຫວັງຫຍັງໃນນີ້, ແລ້ວເຈົ້າກໍສາມາດໄປໄດ້. ພຣະທຳເຫຼົ່ານີ້ຖືກກ່າວຕໍ່ເຈົ້າຢ່າງຊັດເຈນ, ແຕ່ຖ້າເຈົ້າປາຖະໜາທີ່ຈະໄປແທ້ຈິງ, ນີ້ກໍສະແດງໃຫ້ເຫັນວ່າ ເຈົ້າບໍ່ມີຄວາມສຳນຶກແມ່ນແຕ່ໜ້ອຍດຽວ; ການກະທຳຂອງເຈົ້າແບບນີ້ແມ່ນພຽງພໍທີ່ຈະພິສູດວ່າເຈົ້າເປັນມານຮ້າຍ. ເຖິງແມ່ນເຈົ້າເວົ້າວ່າ ເຈົ້າປະຖິ້ມທຸກຢ່າງໃຫ້ຂຶ້ນກັບການປັ້ນແຕ່ງຂອງພຣະເຈົ້າ, ອີງຕາມເນື້ອໜັງຂອງເຈົ້າ ແລະ ສິ່ງທີ່ເຈົ້າດຳລົງຊີວິດຕາມ, ເຈົ້າຍັງດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ. ເຖິງແມ່ນຊາຕານກໍຢູ່ໃນກຳມືຂອງພຣະເຈົ້າ, ເຈົ້າເອງກໍຍັງເປັນຂອງຊາຕານຢູ່ດີ ແລະ ຍັງບໍ່ໄດ້ຖືກພຣະເຈົ້າຊ່ວຍໃຫ້ລອດພົ້ນຢ່າງແທ້ຈິງເທື່ອ, ຍ້ອນວ່າເຈົ້າຍັງດຳລົງຊີວິດພາຍໃຕ້ອິດທິພົນຂອງຊາຕານຢູ່. ແລ້ວເຈົ້າຕ້ອງສະແຫວງຫາດ້ວຍວິທີໃດຈຶ່ງຈະຖືກຊ່ວຍໃຫ້ລອດພົ້ນ? ທາງເລືອກແມ່ນເປັນຂອງເຈົ້າ, ເຈົ້າຄວນເລືອກເສັ້ນທາງທີ່ເຈົ້າຄວນຍ່າງ. ໃນທີ່ສຸດແລ້ວ ຖ້າເຈົ້າສາມາດເວົ້າວ່າ: "ຂ້ານ້ອຍບໍ່ມີຫຍັງດີກວ່ານີ້, ຂ້ານ້ອຍຕອບແທນຄວາມຮັກຂອງພຣະເຈົ້າດ້ວຍຄວາມສຳນຶກຂອງຂ້ານ້ອຍ ແລະ ຕ້ອງມີຄວາມເປັນມະນຸດເລັກນ້ອຍ. ຂ້ານ້ອຍບໍ່ສາມາດບັນລຸຫຍັງໄດ້ຫຼາຍກວ່ານີ້ ຫຼື ຄວາມສາມາດຂອງຂ້ານ້ອຍບໍ່ໄດ້ສູງພໍ; ຂ້ານ້ອຍບໍ່ເຂົ້າໃຈນິມິດ ແລະ ຄວາມໝາຍຂອງພາລະກິດຂອງພຣະເຈົ້າ. ຂ້ານ້ອຍພຽງແຕ່ຕອບແທນຄວາມຮັກຂອງພຣະເຈົ້າ, ຂ້ານ້ອຍເຮັດທຸກສິ່ງທີ່ພຣະເຈົ້າຮຽກຮ້ອງ ແລະ ຂ້ານ້ອຍເຮັດທຸກສິ່ງທີ່ຂ້ານ້ອຍສາມາດເຮັດໄດ້. ຂ້ານ້ອຍປະຕິບັດໜ້າທີ່ຂອງຂ້ານ້ອຍຢ່າງເໝາະສົມໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ", ຖ້າເຈົ້າສາມາດເວົ້າສິ່ງເຫຼົ່ານີ້, ແລ້ວເຮົາກໍຈະຮູ້ສຶກພໍໃຈຫຼາຍ. ສິ່ງນີ້ແມ່ນຄຳພະຍານສູງສຸດທີ່ເຈົ້າສາມາດເຮັດໄດ້. ນີ້ແມ່ນມາດຕະຖານສູງສຸດທີ່ຮຽກຮ້ອງຈາກຄົນສ່ວນໜຶ່ງ: ປະຕິບັດໜ້າທີ່ໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ. ໃຫ້ເຮັດຫຼາຍສໍ່າທີ່ເຈົ້າສາມາດເຮັດໄດ້; ເງື່ອນໄຂທີ່ຮຽກຮ້ອງຈາກເຈົ້າກໍບໍ່ໄດ້ສູງເກີນໄປ. ຕາບໃດທີ່ເຈົ້າສາມາດເຮັດທຸກສິ່ງທີ່ເຈົ້າສາມາດເຮັດໄດ້, ແລ້ວສິ່ງນີ້ກໍເປັນຄຳພະຍານຂອງເຈົ້າ.

# ການປະຕິບັດ (7)

ຄວາມເປັນມະນຸດຂອງພວກເຈົ້າຂາດເຂີນເກີນໄປ, ວິຖີຊີວິດຂອງພວກເຈົ້າກໍຕໍ່າຕ້ອຍ ແລະ ເສື່ອມຊາມເກີນໄປ, ພວກເຈົ້າບໍ່ມີຄວາມເປັນມະນຸດ ແລະ ພວກເຈົ້າຂາດຄວາມເຂົ້າໃຈ. ນັ້ນຄືເຫດຜົນທີ່ພວກເຈົ້າຈໍາເປັນຕ້ອງປະກອບຕົນເອງດ້ວຍສິ່ງທີ່ມີຄວາມເປັນມະນຸດປົກກະຕິ. ການມີຄວາມສໍານຶກ, ເຫດຜົນ ແລະ ຄວາມເຂົ້າໃຈ; ການຮູ້ຈັກວິທີເວົ້າ ແລະ ເບິ່ງສິ່ງຕ່າງໆ; ການໃສ່ໃຈກັບຄວາມສະອາດ; ການເຮັດໜ້າທີ່ດັ່ງມະນຸດປົກກະຕິ, ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນຄຸນລັກສະນະຂອງຄວາມຮູ້ກ່ຽວກັບຄວາມເປັນມະນຸດທີ່ປົກກະຕິ. ເມື່ອພວກເຈົ້າປະພຶດຢ່າງເໝາະສົມໃນສິ່ງເຫຼົ່ານີ້, ແລ້ວພວກເຈົ້າກໍຖືວ່າມີລະດັບຄວາມເປັນມະນຸດທີ່ສາມາດຍອມຮັບໄດ້. ພວກເຈົ້າຍັງຕ້ອງປະກອບຕົນເອງສໍາລັບຊີວິດຝ່າຍວິນຍານ. ພວກເຈົ້າຕ້ອງຮູ້ຈັກພາລະກິດທັງໝົດຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກ ແລະ ມີປະສົບການໃນພຣະທໍາຂອງພຣະອົງ. ເຈົ້າຄວນຮູ້ຈັກວິທີເຊື່ອຟັງການຈັດແຈງຂອງພຣະອົງ ແລະ ວິທີປະຕິບັດໜ້າທີ່ຂອງສິ່ງຖືກສ້າງ. ສິ່ງເຫຼົ່ານີ້ແມ່ນສອງລັກສະນະຂອງສິ່ງທີ່ເຈົ້າຄວນເຂົ້າສູ່ໃນປັດຈຸບັນ ນັ້ນກໍຄື ການປະກອບຕົນເອງສໍາລັບຊີວິດແຫ່ງຄວາມເປັນມະນຸດ ແລະ ການປະຕິບັດສໍາລັບຊີວິດຝ່າຍວິນຍານ. ທັງສອງຢ່າງແມ່ນແຍກອອກຈາກກັນບໍ່ໄດ້.

ບາງຄົນກໍໄຮ້ສາລະ: ພວກເຂົາຮູ້ຈັກພຽງແຕ່ປະດັບຕົນເອງດ້ວຍຄຸນລັກສະນະຂອງຄວາມເປັນມະນຸດ. ບໍ່ສາມາດຄົ້ນພົບຂໍ້ບົກຜ່ອງຫຍັງຈາກຮູບລັກສະນະຂອງພວກເຂົາ; ສິ່ງຕ່າງໆທີ່ພວກເຂົາເວົ້າ ແລະ ລັກສະນະການເວົ້າຂອງພວກເຂົາແມ່ນເໝາະສົມ ແລະ ການນຸ່ງເຄື່ອງຂອງພວກເຂົາກໍສະຫງ່າງາມ ແລະ ເໝາະສົມຫຼາຍ. ແຕ່ພວກເຂົາແມ່ນວ່າງເປົ່າຢູ່ພາຍໃນ; ພວກເຂົາພຽງແຕ່ເບິ່ງຄືກັບມີຄວາມເປັນມະນຸດປົກກະຕິໃນທາງຜິວເຜີນ. ມີບາງຄົນທີ່ພຽງແຕ່ໃສ່ໃຈໃນສິ່ງທີ່ຈະກິນ, ສິ່ງທີ່ຈະນຸ່ງ ແລະ ສິ່ງທີ່ຈະເວົ້າ. ເຖິງກັບມີຄົນທີ່ໃສ່ໃຈໃນສິ່ງຕ່າງໆຢ່າງພິເສດ ເຊັ່ນການກວາດພື້ນ, ການຈັດຕຽງນອນ ແລະ ຄວາມສະອາດທົ່ວໄປ. ພວກເຂົາອາດປະຕິບັດຢ່າງດີໃນທຸກສິ່ງເຫຼົ່ານີ້, ແຕ່ຖ້າເຈົ້າຕ້ອງຂໍໃຫ້ພວກເຂົາເວົ້າກ່ຽວກັບຄວາມຮູ້ຂອງພວກເຂົາກ່ຽວກັບພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍ ຫຼື ກ່ຽວກັບການຂ້ຽນຕີ ແລະ ການພິພາກສາ ຫຼື ການທົດລອງ ແລະ ການຫຼໍ່ຫຼອມ, ພວກເຂົາກໍອາດຈະບໍ່ສະແດງປະສົບການແມ່ນແຕ່ໜ້ອຍດຽວ. ເຈົ້າອາດຖາມພວກເຂົາວ່າ: "ເຈົ້າມີຄວາມເຂົ້າໃຈກ່ຽວກັບພາລະກິດຫຼັກຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກບໍ? ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນແຕກຕ່າງຈາກພາລະກິດຂອງພຣະເຢຊູແນວໃດ? ຈາກພາລະກິດຂອງພຣະເຢໂຮວາເດ? ພຣະອົງທັງສອງເປັນພຣະເຈົ້າອົງດຽວກັນບໍ? ພຣະອົງໄດ້ມາເພື່ອນໍາຈຸດສິ້ນສຸດມາສູ່ຍຸກນີ້ ຫຼື ຊ່ວຍມະນຸດໃຫ້ລອດພົ້ນບໍ?" ແຕ່ຄົນດັ່ງກ່າວບໍ່ມີຫຍັງທີ່ຈະເວົ້າກ່ຽວກັບເລື່ອງເຫຼົ່ານີ້. ບາງຄົນປະດັບຕົນເອງຢ່າງສວຍງາມ, ແຕ່ໃນທາງຜິວເຜີນ: ເອື້ອຍນ້ອງປະດັບຕົນເອງຢ່າງສວຍງາມດັ່ງດອກໄມ້ ແລະ ອ້າຍນ້ອງກໍນຸ່ງເຄື່ອງຄືກັບເຈົ້າຊາຍ ຫຼື ຊາຍໜຸ່ມເຈົ້າຊູ້ທີ່ລໍ້າລວຍ. ພວກເຂົາພຽງແຕ່ໃສ່ໃຈໃນສິ່ງພາຍນອກ ເຊັ່ນ: ສິ່ງທີ່ພວກເຂົາກິນ ແລະ ນຸ່ງ; ຢູ່ພາຍໃນ, ພວກເຂົາຂາດແຄນ ແລະ ບໍ່ມີຄວາມຮູ້ກ່ຽວກັບພຣະເຈົ້າແມ່ນແຕ່

ໜ້ອຍດຽວ. ແມ່ນຫຍັງຄືຄວາມໝາຍໃນສິ່ງນີ້? ແລ້ວກໍຍັງ ມີບາງຄົນທີ່ນຸ່ງຄືກັບຄົນຂໍທານທີ່ຍາກຈົນ, ພວກເຂົາເບິ່ງຄືກັບທາດຈາກອາຊີຕາເວັນອອກແທ້ໆ! ພວກເຈົ້າບໍ່ເຂົ້າໃຈບໍວ່າເຮົາຮຽກຮ້ອງຫຍັງຈາກພວກເຈົ້າກັນແທ້? ໃຫ້ສົນທະນາທ່າມກາງພວກເຈົ້າເອງເບິ່ງວ່າ: ພວກເຈົ້າໄດ້ຮັບຫຍັງກັນແທ້? ພວກເຈົ້າເຊື່ອໃນພຣະເຈົ້າຕະຫຼອດເວລາຫຼາຍປີເຫຼົ່ານີ້, ແຕ່ນີ້ຄືທຸກສິ່ງທີ່ພວກເຈົ້າໄດ້ເກັບກ່ຽວ, ພວກເຈົ້າບໍ່ອາຍບໍ? ພວກເຈົ້າບໍ່ອັບອາຍບໍ? ພວກເຈົ້າໄດ້ສະແຫວງຫາຫົນທາງທີ່ແທ້ຈິງຕະຫຼອດເວລາຫຼາຍປີເຫຼົ່ານີ້, ແຕ່ໃນປັດຈຸບັນ ວຸດທິພາວະຂອງພວກເຈົ້າກໍຍັງຕໍ່າກວ່າວຸດທິພາວະຂອງນົກຈອກ! ໃຫ້ເບິ່ງຍິງສາວທີ່ຢູ່ທ່າມກາງພວກເຈົ້າ, ສວຍງາມຄືກັບຮູບພາບທີ່ຢູ່ໃນເຄື່ອງນຸ່ງ ແລະ ເຄື່ອງສຳອາງຂອງພວກເຈົ້າ, ປຽບທຽບຕົນເອງໃສ່ອີກດ້ານໜຶ່ງ, ແລ້ວພວກເຈົ້າປຽບທຽບຫຍັງ? ຄວາມພໍໃຈຂອງພວກເຈົ້າບໍ? ຄວາມຕ້ອງການຂອງພວກເຈົ້າບໍ? ພວກເຈົ້າຄິດວ່າເຮົາໄດ້ມາເພື່ອຄັດເລືອກເອົາບາງແບບບໍ? ພວກເຈົ້າຊ່າງບໍ່ມີຄວາມລະອາຍໃຈ! ຊີວິດຂອງພວກເຈົ້າຢູ່ໃສ? ສິ່ງທີ່ພວກເຈົ້າສະແຫວງຫາບໍ່ແມ່ນເປັນພຽງຄວາມປາຖະໜາທີ່ເກີນຂອບເຂດຂອງພວກເຈົ້າເອງບໍ? ເຈົ້າຄິດວ່າເຈົ້າງາມຫຼາຍ, ແຕ່ເຖິງແມ່ນເຈົ້າອາດນຸ່ງເຄື່ອງໃນທຸກລັກສະນະທີ່ສວຍງາມ, ໃນຄວາມເປັນຈິງແລ້ວ ເຈົ້າບໍ່ແມ່ນເປັນພຽງໜອນດິ້ນກະດູກກະດຶກທີ່ເກີດໃນກອງຂີ້ສັດບໍ? ມື້ນີ້, ເຈົ້າໂຊກດີທີ່ໄດ້ຮັບພອນຈາກສະຫວັນເຫຼົ່ານີ້ບໍ່ແມ່ນຍ້ອນໃບໜ້າທີ່ສວຍງາມຂອງເຈົ້າ, ແຕ່ຍ້ອນພຣະເຈົ້າໄດ້ເຮັດການຍົກເວັ້ນໂດຍຍົກເຈົ້າຂຶ້ນ. ມັນຍັງບໍ່ຊັດເຈນຕໍ່ເຈົ້າບໍວ່າ ເຈົ້າມາຈາກໃສ? ເມື່ອເວົ້າເຖິງຊີວິດ, ເຈົ້າອັດປາກຂອງເຈົ້າ ແລະ ບໍ່ເວົ້າຫຍັງເລີຍ, ໂງ່ຈ້າຄືກັບຮູບປັ້ນ, ແຕ່ເຈົ້າກໍຍັງໜ້າດ້ານແຕ່ງຕົວເອງ! ເຈົ້າຍັງມັກໃຊ້ແປງ ແລະ ທາແປ້ງໃສ່ໃບໜ້າຂອງເຈົ້າ! ແລ້ວໃຫ້ເບິ່ງຊາຍເຈົ້າຊູ້ທີ່ຢູ່ທ່າມກາງພວກເຈົ້າ, ຜູ້ຊາຍດື້ດ້ານທີ່ໃຊ້ເວລາໝົດມື້ເພື່ອຍ່າງໄປມາຢ່າງບໍ່ມີລະບົບລະບຽບ ພ້ອມກັບສີໜ້າເສີຍເມີຍໃນໃບໜ້າຂອງພວກເຂົາ. ນີ້ແມ່ນວິທີທີ່ບຸກຄົນໃດໜຶ່ງຄວນປະພຶດບໍ? ແຕ່ລະຄົນທີ່ຢູ່ທ່າມກາງພວກເຈົ້າ ບໍ່ວ່າຈະເປັນຜູ້ຊາຍ ຫຼື ແມ່ຍິງພວກເຈົ້າໄດ້ອຸທິດຄວາມໃສ່ໃຈກັບຫຍັງໝົດມື້? ພວກເຈົ້າຮູ້ບໍວ່າພວກເຈົ້າເພິ່ງພາໃຜເພື່ອລ້ຽງຕົນເອງ? ຈົ່ງເບິ່ງທີ່ການນຸ່ງຖືຂອງເຈົ້າ, ເບິ່ງສິ່ງທີ່ເຈົ້າໄດ້ເກັບກ່ຽວໃນມືຂອງເຈົ້າ, ລູບທ້ອງຂອງເຈົ້າ, ເຈົ້າໄດ້ກຳໄລຫຍັງຈາກລາຄາຂອງເລືອດ ແລະ ເຫື່ອແຮງທີ່ເຈົ້າໄດ້ຈ່າຍໃນຕະຫຼອດເວລາຫຼາຍປີແຫ່ງຄວາມເຊື່ອແບບນີ້? ເຈົ້າຍັງຄິດທີ່ຈະໄປທ່ຽວຊົມ, ເຈົ້າຍັງຄິດທີ່ຈະປະດັບປະດາເນື້ອໜັງທີ່ເໝັນເນົ່າຂອງເຈົ້າ, ນັ້ນຄືການສະແຫວງຫາທີ່ໄຮ້ຄ່າ! ເຈົ້າຖືກຮຽກຮ້ອງໃຫ້ເປັນບຸກຄົນທີ່ປົກກະຕິ, ແຕ່ບັດນີ້ເຈົ້າບໍ່ພຽງແຕ່ຜິດປົກກະຕິ, ເຈົ້າຍັງວິປະລິດອີກດ້ວຍ. ບຸກຄົນເຊັ່ນນັ້ນຈະໜ້າດ້ານມາຢູ່ຕໍ່ໜ້າເຮົາໄດ້ແນວໃດ? ດ້ວຍຄວາມເປັນມະນຸດເຊັ່ນນີ້, ເດີນຂະບວນແຫ່ສະເໜ່ຂອງເຈົ້າ ແລະ ໂອ້ອວດເນື້ອໜັງຂອງເຈົ້າ, ດຳລົງຊີວິດຢູ່ພາຍໃນຕັນຫາແຫ່ງເນື້ອໜັງຢູ່ສະເໝີ, ເຈົ້າບໍ່ແມ່ນເຊື້ອສາຍຂອງມານຮ້າຍທີ່ສົກກະປົກ ແລະ ວິນຍານທີ່ຊົ່ວຮ້າຍບໍ? ເຮົາຈະບໍ່ຍອມໃຫ້ມານຮ້າຍທີ່ສົກກະປົກດັ່ງກ່າວຍັງຄົງມີຊີວິດຢູ່ໄດ້ດົນ! ແລ້ວຢ່າຄິດວ່າເຮົາບໍ່ຮູ້ສິ່ງທີ່ເຈົ້າຄິດຢູ່ໃນໃຈຂອງເຈົ້າ. ເຈົ້າອາດຮັກສາຕັນຫາຂອງເຈົ້າ ແລະ ເນື້ອໜັງຂອງເຈົ້າໄວ້ພາຍໃຕ້ການຄວບຄຸມຢ່າງເຄັ່ງຄັດ, ແຕ່ເຮົາຈະບໍ່ສາມາດຮູ້ຈັກເຖິງຄວາມຄິດທີ່ເຈົ້າມີຢູ່ໃນໃຈຂອງເຈົ້າໄດ້ແນວໃດ? ເຮົາຈະບໍ່ສາມາດຮູ້ຈັກທຸກສິ່ງທີ່ຕາຂອງເຈົ້າປາຖະໜາໄດ້ແນວ

ໃດ? ພວກເຈົ້າຍິງສາວທັງຫຼາຍບໍ່ໄດ້ເຮັດໃຫ້ຕົນເອງສວຍງາມແບບນັ້ນເພື່ອເດີນຂະບວນແຫ່ເນື້ອໜັງຂອງພວກເຈົ້າບໍ? ຜູ້ຊາຍມີຜົນປະໂຫຍດຫຍັງຕໍ່ພວກເຈົ້າ? ພວກເຂົາສາມາດຊ່ວຍເຫຼືອພວກເຈົ້າຈາກທະເລແຫ່ງຄວາມເຈັບປວດແທ້ບໍ? ສຳລັບບັນດາຊາຍເຈົ້າຊູ້ທັງຫຼາຍ, ພວກເຈົ້າທຸກຄົນນຸ່ງເຄື່ອງເພື່ອເຮັດໃຫ້ຕົນເອງເບິ່ງຄືເປັນສຸພາບບຸລຸດ ແລະ ໂດດເດັ່ນ, ແຕ່ນີ້ບໍ່ແມ່ນຍຸດທະວິທີທີ່ຖືກອອກແບບມາເພື່ອນຳຄວາມສົນໃຈມາສູ່ຮູບລັກສະນະທີ່ມີສະເໜ່ຂອງເຈົ້າບໍ? ພວກເຈົ້າເຮັດສິ່ງນີ້ເພື່ອຜູ້ໃດ? ແມ່ຍິງມີຜົນປະໂຫຍດຫຍັງຕໍ່ພວກເຈົ້າ? ພວກເຂົາບໍ່ແມ່ນແຫຼ່ງທີ່ມາຂອງຄວາມຜິດບາບຂອງພວກເຈົ້າບໍ? ພວກເຈົ້າ ທີ່ເປັນຜູ້ຊາຍ ແລະ ແມ່ຍິງເອີຍ, ເຮົາໄດ້ກ່າວພຣະທຳຫຼາຍຂໍ້ຕໍ່ພວກເຈົ້າ, ແຕ່ພວກເຈົ້າກໍພຽງແຕ່ປະຕິບັດຕາມພຣະທຳສອງສາມຂໍ້ເທົ່ານັ້ນ. ຫູຂອງພວກເຈົ້າຍາກທີ່ຈະໄດ້ຍິນ, ຕາຂອງພວກເຈົ້າເລີ່ມມົວ ແລະ ຫົວໃຈຂອງພວກເຈົ້າກໍແຂງຈົນເຖິງຈຸດທີ່ບໍ່ມີຫຍັງ ນອກຈາກຕັນຫາຢູ່ໃນຮ່າງກາຍຂອງພວກເຈົ້າ, ຈົນພວກເຈົ້າຕິດກັບດັກມັນ, ບໍ່ສາມາດຫຼີບໜີໄດ້. ຜູ້ໃດຕ້ອງການໄປໃກ້ພວກເຈົ້າທີ່ເປັນໜອນ, ພວກເຈົ້າທີ່ດີ້ນກະດູກກະດິກໃນຄວາມສົກກະປົກ ແລະ ເປື້ອນເປິ? ຢ່າລືມວ່າພວກເຈົ້າບໍ່ໄດ້ເປັນຫຍັງຫຼາຍໄປກວ່າຄົນທີ່ເຮົາຍົກມາຈາກກອງຂີ້ສັດ, ໂດຍດັ່ງເດີມແລ້ວ ພວກເຈົ້າບໍ່ມີຄວາມເປັນມະນຸດປົກກະຕິ. ສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າກໍຄືຄວາມເປັນມະນຸດປົກກະຕິ ທີ່ພວກເຈົ້າບໍ່ມີໃນຕົ້ນເດີມ, ບໍ່ແມ່ນໃຫ້ພວກເຈົ້າເດີນຂະບວນແຫ່ຕັນຫາຂອງພວກເຈົ້າ ຫຼື ໃຫ້ອິດສະຫຼະໃນການສະແດງເນື້ອໜັງທີ່ເໝັນເນົ່າຂອງພວກເຈົ້າ ເຊິ່ງຖືກຝຶກຝົນໂດຍມານຮ້າຍເປັນເວລາຫຼາຍປີ. ເມື່ອພວກເຈົ້າແຕ່ງຕົວແບບນັ້ນ, ພວກເຈົ້າບໍ່ຢ້ານບໍວ່າ ພວກເຈົ້າຈະຕິດກັບດັກຮ້າຍແຮງຍິ່ງຂຶ້ນ? ພວກເຈົ້າບໍ່ຮູ້ບໍວ່າ ໂດຍຕົ້ນເດີມແລ້ວ ພວກເຈົ້າແມ່ນເປັນຂອງຜິດບາບ? ພວກເຈົ້າບໍ່ຮູ້ບໍວ່າ ຮ່າງກາຍຂອງພວກເຈົ້າເຕັມໄປດ້ວຍຕັນຫາຈົນມັນເຖິງກັບໄຫຼຊຶມອອກຈາກເຄື່ອງນຸ່ງຂອງພວກເຈົ້າ, ເປີດເຜີຍສະພາວະຂອງພວກເຈົ້າວ່າເປັນມານຮ້າຍທີ່ຂີ້ຮ້າຍ ແລະ ສົກກະປົກຢ່າງເຫຼືອທົນ? ມັນບໍ່ແມ່ນໃນກໍລະນີທີ່ພວກເຈົ້າຮູ້ຈັກສິ່ງນີ້ຢ່າງຊັດເຈນກວ່າຄົນອື່ນບໍ? ຫົວໃຈຂອງພວກເຈົ້າ, ຕາຂອງພວກເຈົ້າ, ຮີມສົບຂອງພວກເຈົ້າ, ພວກມັນທັງໝົດບໍ່ໄດ້ຖືກເຮັດໃຫ້ເປິເປື້ອນໂດຍມານຮ້າຍທີ່ສົກກະປົກບໍ? ສ່ວນເຫຼົ່ານີ້ຂອງພວກເຈົ້າບໍ່ໄດ້ສົກກະປົກບໍ? ເຈົ້າຄິດວ່າ ຕາບໃດທີ່ເຈົ້າບໍ່ປະພຶດ, ແລ້ວເຈົ້າບໍລິສຸດທີ່ສຸດບໍ? ເຈົ້າຄິດວ່າການນຸ່ງເສື້ອຜ້າທີ່ສວຍງາມຈະສາມາດປົກປິດຈິດວິນຍານທີ່ຊົ່ວຊ້າຂອງພວກເຈົ້າບໍ? ສິ່ງນັ້ນຈະບໍ່ເກີດຜົນ! ເຮົາແນະນຳພວກເຈົ້າໃຫ້ເປັນຈິງຫຼາຍຂຶ້ນ: ຢ່າສໍ້ໂກງ ແລະ ທຳທ່າເຮັດ ແລະ ຢ່າແຫ່ຂະບວນຕົນເອງ. ພວກເຈົ້າໂອ້ອວດຕັນຫາຂອງພວກເຈົ້າຕໍ່ກັນເອງ, ແຕ່ສິ່ງທີ່ພວກເຈົ້າຈະໄດ້ຮັບເປັນການຕອບແທນກໍຄືການທົນທຸກຕະຫຼອດໄປ ແລະ ການຂ້ຽນຕີທີ່ໄຮ້ປານີເທົ່ານັ້ນ! ພວກເຈົ້າມີຄວາມຈຳເປັນຫຍັງທີ່ຈະສົ່ງສາຍຕາໃຫ້ກັນເອງ ແລະ ໝົກມຸ້ນຢູ່ກັບຄວາມຮັກ? ນີ້ແມ່ນການວັດແທກຄວາມຊື່ສັດຂອງພວກເຈົ້າ ແລະ ຂອບເຂດຄວາມທ່ຽງທຳຂອງພວກເຈົ້າບໍ? ເຮົາກຽດຊັງບັນດາຜູ້ຄົນໃນທ່າມກາງພວກເຈົ້າທີ່ມີສ່ວນຮ່ວມໃນການເຮັດຢາ ແລະ ເວດມົນທີ່ຊົ່ວຮ້າຍ; ເຮົາກຽດຊັງຊາຍໜຸ່ມ ແລະ ຍິງໜຸ່ມໃນບັນດາພວກເຈົ້າທີ່ຮັກເນື້ອໜັງຂອງພວກເຂົາເອງ. ພວກເຈົ້າຄວນຈະຢັບຢັ້ງຕົນເອງ, ຍ້ອນບັດນີ້ ພວກເຈົ້າຖືກຮຽກຮ້ອງໃຫ້ມີຄວາມເປັນມະນຸດທີ່ປົກກະຕິ ແລະ ພວກເຈົ້າບໍ່ໄດ້ຮັບ

ອະນຸຍາດໃຫ້ໂອ້ອວດຕັນຫາຂອງພວກເຈົ້າ, ແຕ່ພວກເຈົ້າກໍໃຊ້ທຸກໂອກາດທີ່ພວກເຈົ້າສາມາດໃຊ້ໄດ້, ຍ້ອນເນື້ອໜັງຂອງພວກເຈົ້າອຸດົມສົມບູນເກີນໄປ ແລະ ຕັນຫາຂອງພວກເຈົ້າກໍມີຫຼາຍເກີນໄປ!

ໃນທາງຜິວເຜີນ, ຊີວິດແຫ່ງຄວາມເປັນມະນຸດປົກກະຕິຂອງເຈົ້າແມ່ນຖືກຈັດແຈງຢ່າງດີຫຼາຍ, ແຕ່ເຈົ້າບໍ່ມີຫຍັງຈະເວົ້າ ເມື່ອຖືກຂໍໃຫ້ເວົ້າເຖິງຄວາມຮູ້ກ່ຽວກັບຊີວິດຂອງເຈົ້າ; ແລະ ໃນສິ່ງນີ້ ເຈົ້າແມ່ນຂາດເຂີນຫຼາຍ. ເຈົ້າຕ້ອງປະກອບຕົວເອງດ້ວຍຄວາມຈິງ! ຊີວິດແຫ່ງຄວາມເປັນມະນຸດຂອງເຈົ້າໄດ້ປ່ຽນແປງໄປໃນທາງທີ່ດີ ແລະ ດ້ວຍເຫດນັ້ນ ຊີວິດທີ່ຢູ່ພາຍໃນເຈົ້າກໍຕ້ອງປ່ຽນເຊັ່ນດຽວກັນ; ປ່ຽນແປງຄວາມຄິດຂອງເຈົ້າ, ປ່ຽນແປງມຸມມອງຂອງເຈົ້າກ່ຽວກັບຄວາມເຊື່ອໃນພຣະເຈົ້າ, ປ່ຽນແປງຄວາມຮູ້ ແລະ ການຄິດທີ່ຢູ່ພາຍໃນເຈົ້າ ແລະ ປ່ຽນແປງຄວາມຮູ້ກ່ຽວກັບພຣະເຈົ້າທີ່ມັນຢູ່ພາຍໃຕ້ແນວຄິດຂອງເຈົ້າ. ຜ່ານການຖືກຈັດການ, ຜ່ານການເປີດເຜີຍ ແລະ ການບຳລຸງລ້ຽງ, ຈຶ່ງປ່ຽນແປງຄວາມຮູ້ຂອງເຈົ້າກ່ຽວກັບຕົວເຈົ້າເອງ, ກ່ຽວກັບຊີວິດມະນຸດ ແລະ ກ່ຽວກັບຄວາມເຊື່ອໃນພຣະເຈົ້າ; ຈຶ່ງເຮັດໃຫ້ຄວາມເຂົ້າໃຈຂອງເຈົ້າສາມາດມີຄວາມບໍລິສຸດໄດ້. ໃນລັກສະນະນີ້, ຄວາມຄິດທີ່ຢູ່ພາຍໃນມະນຸດຈຶ່ງຈະປ່ຽນແປງ, ວິທີທີ່ເຂົາເຫັນສິ່ງຕ່າງໆກໍປ່ຽນແປງ ແລະ ທ່າທີທາງຈິດໃຈຂອງເຂົາກໍປ່ຽນແປງ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງຈະຖືກເອີ້ນວ່າການປ່ຽນແປງໃນຊີວິດ-ອຸປະນິໄສ. ເຈົ້າບໍ່ໄດ້ຖືກຂໍຮ້ອງໃຫ້ໃຊ້ເວລາໝົດມື້ເພື່ອອ່ານໜັງສືແຫ່ງພຣະທຳຂອງພຣະເຈົ້າ ຫຼື ຊັກເສື້ອຜ້າ ແລະ ອານາໄມ. ຢ່າງໜ້ອຍທີ່ສຸດ ຊີວິດແຫ່ງການເປັນມະນຸດທີ່ປົກກະຕິຕ້ອງມີຄວາມອົດທົນໂດຍທຳມະຊາດ. ນອກຈາກນັ້ນ, ເມື່ອຈັດການກັບບັນຫາພາຍນອກ, ເຈົ້າກໍຕ້ອງຍັງໃຊ້ຄວາມເຂົ້າໃຈ ແລະ ເຫດຜົນບາງຢ່າງ; ແຕ່ສິ່ງທີ່ສຳຄັນທີ່ສຸດກໍຄືເຈົ້າຕ້ອງປະກອບດ້ວຍຄວາມຈິງແຫ່ງຊີວິດ. ເມື່ອຈັດຕຽມຕົນເອງເພື່ອຊີວິດ, ເຈົ້າຕ້ອງໃສ່ໃຈໃນການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງສາມາດເວົ້າເຖິງຄວາມຮູ້ກ່ຽວກັບພຣະເຈົ້າ, ມຸມມອງຂອງເຈົ້າກ່ຽວກັບຊີວິດມະນຸດ ແລະ ໂດຍສະເພາະແມ່ນຄວາມຮູ້ຂອງເຈົ້າກ່ຽວກັບພາລະກິດທີ່ພຣະເຈົ້າໄດ້ປະຕິບັດໃນລະຫວ່າງຍຸກສຸດທ້າຍ. ຍ້ອນເຈົ້າສະແຫວງຫາຊີວິດ, ເຈົ້າຕ້ອງປະກອບຕົນເອງດ້ວຍສິ່ງຕ່າງໆເຫຼົ່ານີ້. ເມື່ອເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງວັດແທກຄວາມເປັນຈິງໃນສະພາວະຂອງເຈົ້າເອງໃສ່ສິ່ງເຫຼົ່ານັ້ນ. ນັ້ນກໍຄື ເມື່ອເຈົ້າຄົ້ນພົບຂໍ້ບົກຜ່ອງຂອງເຈົ້າໃນຊ່ວງເວລາປະສົບການຕົວຈິງຂອງເຈົ້າ, ເຈົ້າຕ້ອງສາມາດຄົ້ນພົບເສັ້ນທາງເພື່ອປະຕິບັດ, ສາມາດຫັນຫຼັງຂອງເຈົ້າໃສ່ແຮງຈູງໃຈ ແລະ ແນວຄິດທີ່ບໍ່ຖືກຕ້ອງຂອງເຈົ້າ. ຖ້າເຈົ້າພະຍາຍາມຫາສິ່ງເຫຼົ່ານີ້ ແລະ ຖອກເທຫົວໃຈຂອງເຈົ້າເພື່ອບັນລຸພວກມັນຢູ່ສະເໝີ, ແລ້ວເຈົ້າກໍຈະມີເສັ້ນທາງໃຫ້ຕິດຕາມ, ເຈົ້າຈະບໍ່ຮູ້ສຶກວ່າງເປົ່າ ແລະ ດ້ວຍເຫດນັ້ນ ເຈົ້າຈະສາມາດຮັກສາສະພາວະທີ່ປົກກະຕິໄດ້. ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະເປັນຄົນທີ່ແບກພາລະໃນຊີວິດຂອງເຈົ້າເອງໃນຖານະທີ່ເປັນຜູ້ມີຄວາມເຊື່ອ. ເປັນຫຍັງບາງຄົນຈຶ່ງບໍ່ສາມາດນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ ຫຼັງຈາກທີ່ໄດ້ອ່ານພຣະທຳເຫຼົ່ານັ້ນ? ມັນບໍ່ແມ່ນຍ້ອນພວກເຂົາບໍ່ສາມາດເຂົ້າໃຈສິ່ງທີ່ສຳຄັນທີ່ສຸດບໍ? ມັນບໍ່ແມ່ນຍ້ອນພວກເຂົາບໍ່ຈິງຈັງກັບຊີວິດບໍ? ເຫດຜົນທີ່ພວກເຂົາບໍ່ສາມາດເຂົ້າໃຈສິ່ງທີ່ສຳຄັນ ແລະ ບໍ່ມີເສັ້ນທາງໃຫ້ປະຕິບັດກໍຄືເມື່ອພວກເຂົາອ່ານພຣະທຳຂອງພຣະເຈົ້າ, ພວກເຂົາບໍ່ສາມາດເຊື່ອມໂຍງສະພາວະຂອງພວກເຂົາ

ເອງໃສ່ສິ່ງເຫຼົ່ານັ້ນໄດ້ ຫຼື ພວກເຂົາບໍ່ສາມາດຄວບຄຸມສະພາວະຂອງພວກເຂົາເອງ. ບາງຄົນເວົ້າວ່າ: "ຂ້ານ້ອຍອ່ານພຣະທຳຂອງພຣະເຈົ້າ ແລະ ເຊື່ອມໂຍງສະພາວະຂອງຂ້ານ້ອຍໃສ່ສິ່ງເຫຼົ່ານັ້ນ ແລະ ຂ້ານ້ອຍຮູ້ວ່າ ຂ້ານ້ອຍເສື່ອມຊາມ ແລະ ມີຄວາມສາມາດຕ່ຳ, ແຕ່ຂ້ານ້ອຍບໍ່ສາມາດເຮັດໃຫ້ພໍໃຈຕາມຄວາມປະສົງຂອງພຣະເຈົ້າໄດ້". ເຈົ້າພຽງແຕ່ໄດ້ເຫັນສິ່ງທີ່ຢູ່ພາຍນອກເທົ່ານັ້ນ; ມີຫຼາຍສິ່ງທີ່ເປັນຈິງທີ່ເຈົ້າບໍ່ຮູ້: ວິທີການປ່ອຍວາງຄວາມສຸກທາງເນື້ອໜັງ, ວິທີການປ່ອຍວາງການໂອ້ອວດຕົນເອງວ່າເປັນຄົນຊອບທຳ, ວິທີການປ່ຽນແປງຕົນເອງ, ວິທີການເຂົ້າສູ່ສິ່ງເຫຼົ່ານີ້, ວິທີການປັບປຸງຄວາມສາມາດຂອງເຈົ້າ ແລະ ຈະເລີ່ມຕົ້ນຈາກດ້ານໃດ. ເຈົ້າພຽງເຂົ້າໃຈສິ່ງເລັກນ້ອຍໃນຜິວເຜີນເທົ່ານັ້ນ ແລະ ທຸກສິ່ງທີ່ເຈົ້າຮູ້ກໍຄືເຈົ້າເສື່ອມຊາມຫຼາຍແທ້ໆ. ເມື່ອເຈົ້າພົບກັບອ້າຍເອື້ອຍນ້ອງຂອງເຈົ້າ, ເຈົ້າກໍເວົ້າວ່າເຈົ້າເສື່ອມຊາມສ່ຳໃດ ແລະ ມັນເບິ່ງຄືກັບວ່າເຈົ້າຮູ້ຈັກຕົນເອງ ແລະ ແບກພາລະອັນໜັກໜ່ວງສຳລັບຊີວິດຂອງເຈົ້າ. ໃນຄວາມເປັນຈິງແລ້ວ, ອຸປະນິໄສທີ່ເສື່ອມຊາມຂອງເຈົ້າບໍ່ໄດ້ປ່ຽນແປງ ເຊິ່ງພິສູດວ່າເຈົ້າບໍ່ໄດ້ຄົ້ນພົບເສັ້ນທາງສູ່ການປະຕິບັດ. ຖ້າເຈົ້າກຳລັງນຳພາຄຣິສຕະຈັກ, ເຈົ້າຕ້ອງສາມາດເຂົ້າໃຈສະພາວະຂອງອ້າຍເອື້ອຍນ້ອງ ແລະ ຊີ້ແຈງສິ່ງເຫຼົ່ານັ້ນ. ມັນຈະເກີດຜົນບໍ ຖ້າເຈົ້າພຽງແຕ່ເວົ້າວ່າ: "ພວກເຈົ້າຄືຄົນທີ່ບໍ່ເຊື່ອຟັງ ແລະ ຫຼ້າຫຼັງ"? ບໍ່, ເຈົ້າຕ້ອງເວົ້າຢ່າງລະອຽດເຖິງວິທີການສະແດງຄວາມບໍ່ເຊື່ອຟັງ ແລະ ຄວາມຫຼັງຫຼັງຂອງພວກເຂົາ. ເຈົ້າຕ້ອງເວົ້າເຖິງສະພາວະທີ່ບໍ່ເຊື່ອຟັງຂອງພວກເຂົາ, ພຶດຕິກຳທີ່ບໍ່ເຊື່ອຟັງຂອງພວກເຂົາ ແລະ ອຸປະນິໄສແບບຊາຕານຂອງພວກເຂົາ ແລະ ເຈົ້າຕ້ອງເວົ້າເຖິງສິ່ງເຫຼົ່ານີ້ໃນລັກສະນະທີ່ເຮັດໃຫ້ພວກເຂົາເຊື່ອທີ່ສຸດໃນຄວາມຈິງທີ່ຢູ່ໃນຄຳເວົ້າຂອງເຈົ້າ. ໃຫ້ໃຊ້ຂໍ້ແທ້ຈິງ ແລະ ຕົວຢ່າງເພື່ອອ້າງເຫດຜົນຂອງເຈົ້າ ແລະ ເວົ້າຢ່າງຖືກຕ້ອງເຖິງວິທີທີ່ພວກເຂົາສາມາດເປັນອິດສະຫຼະຈາກພຶດຕິກຳທີ່ເປັນປໍລະປັກ ແລະ ຊີ້ນຳເສັ້ນທາງສູ່ການປະຕິບັດ, ນີ້ແມ່ນວິທີທີ່ຈະເຮັດໃຫ້ຜູ້ຄົນເຊື່ອ. ມີພຽງແຕ່ຄົນທີ່ເຮັດແບບນີ້ເທົ່ານັ້ນຈຶ່ງສາມາດນຳພາຄົນອື່ນໄດ້; ມີພຽງເມື່ອນັ້ນພວກເຂົາຈຶ່ງຈະມີຄວາມເປັນຈິງແຫ່ງຄວາມຈິງ.

ບັດນີ້ ພວກເຈົ້າໄດ້ຮັບຄວາມຈິງຫຼາຍຢ່າງຜ່ານທາງການສົນທະນາ ແລະ ເຈົ້າຕ້ອງທົບທວນສິ່ງເຫຼົ່ານັ້ນທັງໝົດ. ເຈົ້າຄວນສາມາດສະຫຼຸບໄດ້ວ່າມີຄວາມຈິງທັງໝົດເທົ່າໃດ. ຫຼັງຈາກທີ່ເຈົ້າຮູ້ ແລະ ສາມາດແຍກແຍະດ້ວຍຕົນເອງລະຫວ່າງສອງສາມລັກສະນະຂອງຄວາມເປັນມະນຸດປົກກະຕິທີ່ຄົນໆໜຶ່ງຄວນມີ, ລັກສະນະຫຼັກຂອງການປ່ຽນແປງໃນຊີວິດ ນັ້ນກໍຄື ອຸປະນິໄສຂອງຄົນໆໜຶ່ງ, ການລົງເລິກຂອງນິມິດ ແລະ ວິທີການທີ່ບໍ່ຖືກຕ້ອງຂອງການຮູ້ ແລະ ປະສົບການທີ່ຜູ້ຄົນໄດ້ນຳໃຊ້ຕະຫຼອດຍຸກຕ່າງໆ, ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະຢູ່ໃນເສັ້ນທາງທີ່ຖືກຕ້ອງ. ຜູ້ຄົນໃນສາສະໜານະມັດສະການພຣະຄຳພີຄືກັບວ່າມັນເປັນພຣະເຈົ້າ; ໂດຍສະເພາະແລ້ວ ພວກເຂົາຖືພຣະກິດຕິຄຸນທັງສີ່ໃນພຣະສັນຍາໃໝ່ຄືກັບວ່າພວກມັນເປັນໃບໜ້າສີ່ດ້ານທີ່ແຕກຕ່າງກັນຂອງພຣະເຢຊູ ແລະ ພວກເຂົາກໍເວົ້າເຖິງພຣະເຈົ້າຕຣີເອກະນຸພາບແຫ່ງພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍລິສຸດ. ສິ່ງນີ້ແມ່ນລ້ວນແລ້ວແຕ່ເປັນຕາຫົວທີ່ສຸດ ແລະ ພວກເຈົ້າທຸກຄົນຕ້ອງເບິ່ງຜ່ານມັນໄປ; ຍິ່ງໄປກວ່ານັ້ນ ພວກເຈົ້າຕ້ອງມີຄວາມຮູ້ກ່ຽວກັບທາດແທ້ຂອງພຣະເຈົ້າທີ່ກາຍມາເປັນເນື້ອໜັງ ແລະ ພາລະກິດໃນຍຸກສຸດທ້າຍ.

ຍັງມີວິທີການເດີມໆເຫຼົ່ານັ້ນໃນການປະຕິບັດ, ຄວາມເຊື່ອຜິດໆ ແລະ ການຫັນເຫເຫຼົ່ານີ້ທີ່ກ່ຽວພັນກັບການປະຕິບັດ, ການດຳລົງຊີວິດໃນວິນຍານ, ການເຕັມໄປດ້ວຍພຣະວິນຍານບໍລິສຸດ, ການຍອມຕໍ່ສິ່ງໃດກໍຕາມທີ່ມາເຖິງ, ການຍອມຕໍ່ສິດອຳນາດທີ່ເຈົ້າຕ້ອງຮູ້; ເຈົ້າຄວນຮູ້ວິທີທີ່ຜູ້ຄົນປະຕິບັດກ່ອນໜ້ານີ້ ແລະ ວິທີທີ່ຜູ້ຄົນຕ້ອງປະຕິບັດໃນມື້ນີ້. ແລ້ວສຳລັບວິທີທີ່ຜູ້ນຳ ແລະ ຜູ້ປະຕິບັດພາລະກິດຄວນຮ່ວມມືກັນໃນຄຣິສຕະຈັກ; ວິທີການປະວາງການຖືວ່າຕົນເອງຊອບທຳ ແລະ ການຖ່ອມຕົນ; ວິທີທີ່ອ້າຍເອື້ອຍນ້ອງຄວນດຳລົງຊີວິດຄຽງຄູ່ກັນ; ວິທີສ້າງຄວາມສຳພັນປົກກະຕິກັບຄົນອື່ນ ແລະ ກັບພຣະເຈົ້າ; ວິທີການບັນລຸຄວາມເປັນປົກກະຕິໃນຊີວິດມະນຸດ; ສິ່ງທີ່ຜູ້ຄົນຄວນມີໃນຊີວິດຝ່າຍວິນຍານຂອງພວກເຂົາ; ວິທີທີ່ພວກເຂົາຄວນກິນ ແລະ ດື່ມພຣະທຳຂອງພຣະເຈົ້າ; ອັນໃດຂອງພຣະທຳຂອງພຣະເຈົ້າທີ່ກ່ຽວຂ້ອງກັບຄວາມຮູ້, ອັນໃດກ່ຽວພັນກັບນິມິດ ແລະ ອັນໃດຂອງພຣະທຳເຫຼົ່ານັ້ນກ່ຽວພັນກັບເສັ້ນທາງໃນການປະຕິບັດ, ສິ່ງເຫຼົ່ານີ້ໄດ້ຖືກກ່າວເຖິງທັງໝົດຢູ່ບໍ? ພຣະທຳເຫຼົ່ານີ້ເປີດເຜີຍຕໍ່ຄົນທີ່ສະແຫວງຫາຄວາມຈິງ ແລະ ບໍ່ມີຜູ້ໃດໄດ້ຮັບການປະຕິບັດທີ່ພິເສດ. ມື້ນີ້ ພວກເຈົ້າຄວນປູກຝັງຄວາມສາມາດທີ່ຈະດຳລົງຊີວິດຢ່າງເປັນອິດສະຫຼະ, ບໍ່ອາໄສຄວາມຄິດໃນການເພິ່ງພາ. ໃນອະນາຄົດ, ເມື່ອບໍ່ມີຜູ້ໃດນຳພາພວກເຈົ້າ, ພວກເຈົ້າຈະຄິດເຖິງພຣະທຳເຫຼົ່ານີ້ຂອງເຮົາ. ໃນເວລາແຫ່ງຄວາມລຳບາກຍາກແຄ້ນ, ເມື່ອມັນເປັນໄປບໍ່ໄດ້ທີ່ຈະມີຊີວິດແຫ່ງຄຣິສຕະຈັກ, ເມື່ອອ້າຍເອື້ອຍນ້ອງບໍ່ສາມາດພົບກັນໄດ້, ພວກເຂົາສ່ວນໃຫຍ່ກຳລັງດຳລົງຊີວິດຢູ່ຄົນດຽວ, ຢ່າງດີທີ່ສຸດກໍພຽງແຕ່ສາມາດສົນທະນາກັບຜູ້ຄົນທີ່ຢູ່ໃນທ້ອງຖິ່ນຂອງພວກເຂົາ, ມັນແມ່ນໃນເວລາເຫຼົ່ານີ້ທີ່ສະແດງເຖິງວຸດທິພາວະໃນປັດຈຸບັນຂອງພວກເຈົ້າ, ພວກເຈົ້າບໍ່ສາມາດຍຶດໝັ້ນໄດ້ແທ້ໆ. ໃນທ່າມກາງຄວາມລຳບາກຍາກແຄ້ນ, ຫຼາຍຄົນພົບວ່າມັນຍາກທີ່ຈະຍຶດໝັ້ນ. ມີພຽງແຕ່ຄົນທີ່ຮູ້ຈັກຫົນທາງແຫ່ງຊີວິດ ແລະ ປະກອບດ້ວຍຄວາມຈິງຢ່າງພຽງພໍຈຶ່ງສາມາດສືບຕໍ່ຄືບໜ້າ ແລະ ບັນລຸຄວາມບໍລິສຸດ ແລະ ການປ່ຽນແປງເທື່ອລະໜ້ອຍ. ການຜະເຊີນກັບຄວາມລຳບາກຍາກແຄ້ນບໍ່ແມ່ນສິ່ງງ່າຍໆ; ຖ້າເຈົ້າຄິດວ່າເຈົ້າຈະຜ່ານພວກມັນໄດ້ໃນສອງສາມມື້, ແລ້ວນີ້ກໍພິສູດວ່າຄວາມຄິດຂອງເຈົ້າມັກງ່າຍສໍ່າໃດ! ເຈົ້າຄິດວ່າ ໂດຍການເຂົ້າໃຈຄຳສັ່ງສອນຫຼາຍຢ່າງ, ເຈົ້າຈະສາມາດຍຶດໝັ້ນ, ແຕ່ນັ້ນບໍ່ໄດ້ເປັນຈິງແບບນັ້ນ! ຖ້າເຈົ້າບໍ່ຮັບຮູ້ສິ່ງຕ່າງໆທີ່ສຳຄັນໃນພຣະທຳຂອງພຣະເຈົ້າ, ບໍ່ສາມາດເຂົ້າໃຈຄຸນລັກສະນະສຳຄັນຂອງຄວາມຈິງ ແລະ ບໍ່ມີເສັ້ນທາງໃຫ້ປະຕິບັດ, ແລ້ວເມື່ອເວລານັ້ນມາເຖິງ ແລະ ມີບາງສິ່ງເກີດຂຶ້ນກັບເຈົ້າ, ເຈົ້າຈະຕົກລົງສູ່ຄວາມສັບສົນ. ເຈົ້າຈະບໍ່ສາມາດຍຶດໝັ້ນຕໍ່ການລໍ້ລວງຂອງຊາຕານ ຫຼື ການໂຈມຕີຂອງການຫຼົ່ນຫຼອມ. ຖ້າບໍ່ມີຄວາມຈິງໃນຕົວເຈົ້າ ແລະ ເຈົ້າຂາດນິມິດ, ແລ້ວເມື່ອເວລານັ້ນມາເຖິງ, ເຈົ້າຈະບໍ່ສາມາດຫ້າມຕົນເອງບໍ່ໃຫ້ລົ້ມສະຫຼາຍໄດ້. ເຈົ້າຈະຍອມຖິ້ມຄວາມຫວັງທັງໝົດ ແລະ ເວົ້າວ່າ “ດີ, ຖ້າຂ້ານ້ອຍຈະຕ້ອງຕາຍຢູ່ແລ້ວ, ຂ້ານ້ອຍກໍຄວນຖືກຂ້ຽນຕີຈົນເຖິງທີ່ສຸດ! ບໍ່ວ່າມັນຈະເປັນການຂ້ຽນຕີ ຫຼື ຖືກສົ່ງລົງສູ່ທະເລສາບແຫ່ງໄຟ, ກໍໃຫ້ມັນເປັນຕາມນັ້ນ, ຂ້ານ້ອຍຈະຮັບເອົາສິ່ງຕ່າງໆດັ່ງທີ່ພວກມັນເກີດຂຶ້ນ!” ສິ່ງນີ້ເປັນຄືກັບທີ່ມັນເຄີຍເປັນໃນລະຫວ່າງເວລາຂອງຜູ້ໃຫ້ບໍລິການ: ບາງຄົນເຊື່ອວ່າພວກເຂົາເປັນຜູ້ໃຫ້ບໍລິການບໍ່ວ່າຫຍັງກໍຕາມ, ສະນັ້ນ ພວກເຂົາຈຶ່ງບໍ່ສະແຫວງຫາຊີວິດອີກ

ຕໍ່ໄປ. ພວກເຂົາສູບຢາ ແລະ ດື່ມ, ໝົກມຸ້ນຢູ່ກັບເນື້ອໜັງຂອງພວກເຂົາ ແລະ ເຮັດສິ່ງທີ່ພວກເຂົາມັກ. ບາງຄົນພຽງແຕ່ກັບຄືນສູ່ໂລກເພື່ອເຮັດວຽກ. ສະພາບແວດລ້ອມທີ່ບໍ່ເອື້ອອຳນວຍກໍເປັນດັ່ງນັ້ນ; ຖ້າເຈົ້າບໍ່ສາມາດເອົາຊະນະມັນໄດ້, ເມື່ອເຈົ້າຍຸຍານກັບການຍຶດໝັ້ນກັບຕົນເອງແມ່ນແຕ່ໜ້ອຍດຽວ, ເຈົ້າກໍຈະປະຖິ້ມຄວາມຫວັງທັງໝົດ. ຖ້າເຈົ້າບໍ່ສາມາດເອົາຊະນະອິດທິພົນຂອງຊາຕານໄດ້, ເຈົ້າກໍຈະຖືກຈັບໄປເປັນຊະເລີຍໂດຍຊາຕານຢ່າງບໍ່ຮູ້ຕົວ ແລະ ສົ່ງໄປຍັງຄວາມພິນາດອີກຄັ້ງ. ສະນັ້ນ ມື້ນີ້ ເຈົ້າຕ້ອງປະກອບຕົນເອງດ້ວຍຄວາມຈິງ; ເຈົ້າຕ້ອງສາມາດທີ່ຈະດຳລົງຊີວິດຢູ່ຢ່າງເປັນອິດສະຫຼະ; ແລະ ເມື່ອເຈົ້າອ່ານພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງສາມາດທີ່ຈະຊອກຫາເສັ້ນທາງເພື່ອປະຕິບັດ. ຖ້າບໍ່ມີຜູ້ນຳ ຫຼື ຜູ້ປະຕິບັດພາລະກິດໃຫ້ຫົດນໍ້າ ແລະ ລ້ຽງດູເຈົ້າ, ເຈົ້າກໍຍັງຄວນສາມາດຄົ້ນພົບເສັ້ນທາງໃຫ້ຕິດຕາມ, ຄົ້ນພົບຂໍ້ບົກຜ່ອງຂອງເຈົ້າເອງ, ຄົ້ນພົບຄວາມຈິງທີ່ເຈົ້າຄວນປະກອບຕົນເອງ ແລະ ປະຕິບັດ. ພຣະເຈົ້າຈະສາມາດຕິດຕາມມະນຸດຢ່າງສະໝໍ່າສະເໝີຫຼັງຈາກທີ່ມາເທິງແຜ່ນດິນໂລກໄດ້ແນວໃດ? ພາຍໃນແນວຄິດຂອງພວກເຂົາ, ບາງຄົນເຊື່ອວ່າ: “ພຣະເຈົ້າເອີຍ, ຖ້າພຣະອົງບໍ່ປະຕິບັດພາລະກິດໃນພວກຂ້ານ້ອຍຈົນເຖິງຈຸດໃດໜຶ່ງ, ແລ້ວພາລະກິດຂອງພຣະອົງຈະບໍ່ສາມາດຖືວ່າສຳເລັດໄດ້, ຍ້ອນຊາຕານກຳລັງກ່າວໂທດພຣະອົງ”. ເຮົາບອກເຈົ້າວ່າ ຫຼັງຈາກທີ່ເຮົາສຳເລັດການກ່າວພຣະທຳຂອງເຮົາ, ແລ້ວພາລະກິດຂອງເຮົາກໍຈະຖືກເຮັດໃຫ້ສຳເລັດຢ່າງສົມບູນ. ຫຼັງຈາກທີ່ເຮົາບໍ່ມີຫຍັງໃຫ້ເວົ້າອີກ, ພາລະກິດຂອງເຮົາກໍຈະສິ້ນສຸດລົງ. ການສິ້ນສຸດພາລະກິດຂອງເຮົາຈະເປັນເຄື່ອງພິສູດເຖິງຄວາມພ່າຍແພ້ຂອງຊາຕານ ແລະ ດ້ວຍເຫດນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ມັນຖືກເຮັດໃຫ້ສຳເລັດຢ່າງສົມບູນແລ້ວ ໂດຍປາສະຈາກການກ່າວໂທດໃດໆຈາກຊາຕານ. ແຕ່ຖ້າຍັງບໍ່ມີການປ່ຽນແປງໃນພວກເຈົ້າໃນເວລາທີ່ພາລະກິດຂອງເຮົາສິ້ນສຸດລົງ, ແລ້ວຜູ້ຄົນແບບພວກເຈົ້າກໍເກີນຄວາມລອດພົ້ນ ແລະ ຈະຖືກກຳຈັດ. ເຮົາຈະບໍ່ປະຕິບັດພາລະກິດເພີ່ມເຕີມເກີນຄວາມຈຳເປັນ. ເຮົາຈະບໍ່ສືບຕໍ່ພາລະກິດຂອງເຮົາເທິງແຜ່ນດິນໂລກ ຈົນເຈົ້າໄດ້ຖືກເອົາຊະນະຈົນເຖິງລະດັບໃດໜຶ່ງ ແລະ ພວກເຈົ້າທຸກຄົນໄດ້ມີຄວາມຮູ້ຢ່າງຊັດເຈນກ່ຽວກັບທຸກດ້ານຂອງຄວາມຈິງ ແລະ ຄວາມສາມາດຂອງເຈົ້າໄດ້ຖືກປັບປຸງ ແລະ ເຈົ້າເປັນພະຍານທັງພາຍໃນ ແລະ ພາຍນອກ. ນັ້ນຈະເປັນໄປບໍ່ໄດ້! ມື້ນີ້ ພາລະກິດທີ່ເຮົາປະຕິບັດໃນພວກເຈົ້າແມ່ນເພື່ອນຳພາພວກເຈົ້າໄປສູ່ຊີວິດແຫ່ງຄວາມເປັນມະນຸດທີ່ປົກກະຕິ; ມັນແມ່ນພາລະກິດແຫ່ງການເຂົ້າສູ່ຍຸກໃໝ່ ແລະ ການນຳພາມະນຸດຊາດສູ່ຊີວິດໃນຍຸກໃໝ່. ພາລະກິດນີ້ຖືກປະຕິບັດເທື່ອລະບາດກ້າວ ແລະ ພັດທະນາທ່າມກາງພວກເຈົ້າໂດຍກົງ: ເຮົາສັ່ງສອນພວກເຈົ້າໜ້າຕໍ່ໜ້າ; ເຮົາຈັບມືຂອງພວກເຈົ້າ; ເຮົາບອກພວກເຈົ້າທຸກສິ່ງທີ່ພວກເຈົ້າບໍ່ເຂົ້າໃຈ, ປະທານທຸກສິ່ງທີ່ພວກເຈົ້າຂາດເຂີນໃຫ້ແກ່ພວກເຈົ້າ. ມັນສາມາດເວົ້າໄດ້ວ່າ ສຳລັບພວກເຈົ້າແລ້ວ ພາລະກິດທັງໝົດນີ້ແມ່ນການສະໜອງສຳລັບຊີວິດຂອງພວກເຈົ້າ, ຍັງນຳພາພວກເຈົ້າເຂົ້າສູ່ຊີວິດແຫ່ງຄວາມເປັນມະນຸດທີ່ປົກກະຕິອີກດ້ວຍ; ໂດຍສະເພາະແລ້ວ ມັນແມ່ນເພື່ອສະໜອງການບຳລຸງລ້ຽງໃຫ້ແກ່ຊີວິດຂອງຜູ້ຄົນກຸ່ມນີ້ໃນລະຫວ່າງຍຸກສຸດທ້າຍ. ສຳລັບເຮົາແລ້ວ ພາລະກິດທັງໝົດນີ້ແມ່ນເພື່ອສິ້ນສຸດຍຸກເກົ່າ ແລະ ເລີ່ມຕົ້ນຍຸກໃໝ່; ແຕ່ສຳລັບຊາຕານ ເຮົາໄດ້ກາຍມາເປັນເນື້ອໜັງກໍເພື່ອເອົາຊະນະມັນ. ພາລະກິດທີ່ເຮົາປະຕິບັດທ່າມກາງພວກເຈົ້າ

ໃນຕອນນີ້ແມ່ນການບຳລຸງລ້ຽງຂອງພວກເຈົ້າສຳລັບມື້ນີ້ ແລະ ຄວາມລອດພົ້ນກົງເວລາຂອງພວກເຈົ້າ, ແຕ່ໃນລະຫວ່າງເວລາສອງສາມປີສັ້ນໆເຫຼົ່ານີ້, ເຮົາຈະບອກພວກເຈົ້າກ່ຽວກັບຄວາມຈິງທັງໝົດ, ວິທີການແຫ່ງຊີວິດທັງໝົດ ແລະ ແມ່ນແຕ່ພາລະກິດໃນອະນາຄົດ; ສິ່ງນີ້ຈະພຽງພໍທີ່ຈະເຮັດໃຫ້ພວກເຈົ້າສາມາດພະເຊີນກັບສິ່ງຕ່າງໆຢ່າງຖືກຕ້ອງໃນອະນາຄົດ. ພຣະທຳທຸກຂໍ້ຂອງເຮົາພຽງຢ່າງດຽວແມ່ນສິ່ງທີ່ເຮົາໄດ້ຝາກຝັງໃຫ້ແກ່ພວກເຈົ້າ. ເຮົາບໍ່ໃຫ້ການຕຳໜິຕິເຕືອນຢ່າງອື່ນອີກ; ມື້ນີ້, ພຣະທຳທັງໝົດທີ່ເຮົາກ່າວແກ່ເຈົ້າແມ່ນການທີ່ເຮົາຕຳນິຕິເຕືອນພວກເຈົ້າ, ຍ້ອນມື້ນີ້ ພວກເຈົ້າບໍ່ມີປະສົບການກ່ຽວກັບພຣະທຳຫຼາຍຂໍ້ທີ່ເຮົາໄດ້ກ່າວ ແລະ ບໍ່ເຂົ້າໃຈຄວາມໝາຍທີ່ເລິກເຊິ່ງຂອງພຣະທຳເຫຼົ່ານັ້ນ. ມື້ໜຶ່ງປະສົບການຂອງພວກເຈົ້າຈະອອກໝາກຜົນຄືກັບທີ່ເຮົາເວົ້າເຖິງໃນມື້ນີ້. ພຣະທຳເຫຼົ່ານີ້ແມ່ນນິມິດຂອງພວກເຈົ້າໃນມື້ນີ້ ແລະ ພວກມັນແມ່ນສິ່ງທີ່ພວກເຈົ້າຈະເພິ່ງພາໃນອະນາຄົດ; ພວກມັນຄືການບຳລຸງລ້ຽງຊີວິດໃນປັດຈຸບັນ ແລະ ການຕຳໜິຕິເຕືອນສຳລັບອະນາຄົດ ແລະ ບໍ່ມີການຕຳນິຕິເຕືອນໃດອື່ນທີ່ດີກວ່ານີ້ອີກແລ້ວ. ນີ້ກໍຍ້ອນເວລາທີ່ເຮົາຕ້ອງປະຕິບັດພາລະກິດເທິງແຜ່ນດິນໂລກບໍ່ໄດ້ຍາວນານສໍ່າກັບເວລາທີ່ພວກເຈົ້າຕ້ອງໄດ້ພະເຊີນກັບພຣະທຳຂອງເຮົາ; ເຮົາໃກ້ທີ່ຈະສຳເລັດພາລະກິດຂອງເຮົາໃນຂະນະທີ່ພວກເຈົ້າກຳລັງສະແຫວງຫາຊີວິດ ເຊິ່ງເປັນຂະບວນການທີ່ປະກອບດ້ວຍການເດີນທາງອັນຍາວນານຕະຫຼອດຊີວິດ. ມີພຽງຫຼັງຈາກທີ່ໄດ້ພະເຊີນກັບຫຼາຍສິ່ງເທົ່ານັ້ນ, ເຈົ້າຈຶ່ງຈະສາມາດຮັບເອົາຫົນທາງແຫ່ງຊີວິດຢ່າງສົມບູນ; ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະສາມາດເບິ່ງເຫັນຄວາມໝາຍແທ້ຈິງໃນພຣະທຳທີ່ເຮົາກ່າວໃນປັດຈຸບັນ. ເມື່ອພວກເຈົ້າມີພຣະທຳຂອງເຮົາໄວ້ໃນມືຂອງພວກເຈົ້າ, ເມື່ອພວກເຈົ້າແຕ່ລະຄົນໄດ້ຮັບການຝາກຝັງທັງໝົດຂອງເຮົາ, ຫຼັງຈາກທີ່ເຮົາໄດ້ຝາກຝັງພວກເຈົ້າດ້ວຍທຸກສິ່ງທີ່ເຮົາຄວນຝາກ ແລະ ເມື່ອພາລະກິດແຫ່ງພຣະທຳໄດ້ມາເຖິງຈຸດສິ້ນສຸດ, ບໍ່ວ່າຜົນສະທ້ອນຈະໄດ້ຮັບຜົນຢ່າງໃຫຍ່ຫຼວງສໍ່າໃດກໍຕາມ, ການປະຕິບັດຄວາມປະສົງຂອງພຣະເຈົ້າກໍຈະຖືກບັນລຸຜົນເຊັ່ນກັນ. ມັນບໍ່ແມ່ນດັ່ງທີ່ເຈົ້າຈິນຕະນາການ ທີ່ເຈົ້າຕ້ອງຖືກປ່ຽນແປງຈົນເຖິງລະດັບໃດໜຶ່ງ; ພຣະເຈົ້າບໍ່ປະພຶດຕາມແນວຄິດຂອງເຈົ້າ.

ຜູ້ຄົນບໍ່ບັນລຸການເຕີບໂຕໃນຊີວິດຂອງພວກເຂົາພຽງແຕ່ສອງສາມມື້. ເຖິງແມ່ນພວກເຂົາກິນ ແລະ ດື່ມພຣະທຳຂອງພຣະເຈົ້າໃນແຕ່ລະມື້, ແຕ່ນີ້ກໍບໍ່ພຽງພໍ. ພວກເຂົາຕ້ອງພະເຊີນກັບຊ່ວງເວລາແຫ່ງການເຕີບໂຕໃນຊີວິດຂອງພວກເຂົາ. ນີ້ແມ່ນຂະບວນການທີ່ຈຳເປັນ. ເມື່ອຄຳນຶງເຖິງຄວາມສາມາດຂອງຜູ້ຄົນໃນປັດຈຸບັນ, ພວກເຂົາສາມາດບັນລຸຫຍັງໄດ້ແດ່? ພຣະເຈົ້າປະຕິບັດພາລະກິດຕາມຄວາມຕ້ອງການຂອງຜູ້ຄົນ, ຮຽກຮ້ອງຢ່າງເໝາະສົມໂດຍອີງໃສ່ຄວາມສາມາດໂດຍທຳມະຊາດຂອງພວກເຂົາ. ສົມມຸດວ່າພາລະກິດນີ້ຖືກປະຕິບັດໃນທ່າມກາງກຸ່ມຄົນທີ່ມີຄວາມສາມາດຫຼາຍກວ່າ: ຄຳເວົ້າທີ່ກ່າວອອກກໍຈະສູງສົ່ງກວ່າຄຳເວົ້າທີ່ກ່າວແກ່ພວກເຈົ້າ, ນິມິດກໍຈະສູງສົ່ງກວ່າ ແລະ ຄວາມຈິງກໍຈະຍິ່ງສູງສົ່ງຫຼາຍກວ່ານີ້. ພຣະທຳບາງຂໍ້ຈະຕ້ອງຮຸນແຮງຫຼາຍຂຶ້ນ, ສາມາດສະໜອງໃຫ້ແກ່ຊີວິດຂອງມະນຸດຫຼາຍຂຶ້ນ, ສາມາດເປີດເຜີຍຄວາມລຶກລັບຫຼາຍຂຶ້ນ. ເມື່ອເວົ້າທ່າມກາງຜູ້ຄົນດັ່ງກ່າວ, ພຣະເຈົ້າຈະສະໜອງຕາມຄວາມຕ້ອງການຂອງພວກເຂົາ. ສິ່ງທີ່ຖືກຮຽກຮ້ອງຈາກພວກເຈົ້າໃນປັດຈຸບັນ

ອາດຖືກເອີ້ນວ່າເປັນສິ່ງທີ່ເຂັ້ມງວດທີ່ສຸດ; ຖ້າພາລະກິດນີ້ຖືກປະຕິບັດໃນຜູ້ຄົນທີ່ມີຄວາມສາມາດຫຼາຍກວ່າ, ແລ້ວສິ່ງທີ່ຮຽກຮ້ອງກໍຈະມີຫຼາຍກວ່າເຊັ່ນກັນ. ພາລະກິດທັງໝົດຂອງພຣະເຈົ້າແມ່ນຖືກປະຕິບັດຕາມຄວາມສາມາດໂດຍທຳມະຊາດຂອງຜູ້ຄົນ. ຂອບເຂດທີ່ຜູ້ຄົນຖືກປ່ຽນແປງ ແລະ ເອົາຊະນະໃນປັດຈຸບັນແມ່ນຂອບເຂດທີ່ໃຫຍ່ທີ່ສຸດເທົ່າທີ່ເປັນໄປໄດ້; ຢ່າໃຊ້ແນວຄິດຂອງເຈົ້າເອງເພື່ອວັດແທກວ່າຂັ້ນຕອນນີ້ຂອງພາລະກິດມີປະສິດທິພາບສໍ່າໃດ. ພວກເຈົ້າຄວນຊັດເຈນກ່ຽວກັບສິ່ງທີ່ພວກເຈົ້າມີໂດຍກຳເນີດ ແລະ ບໍ່ຄວນຄິດສູງເກີນໄປກ່ຽວກັບຕົນເອງ. ໂດຍຕົ້ນເດີມແລ້ວ ບໍ່ມີຜູ້ໃດໃນບັນດາພວກເຈົ້າທີ່ສະແຫວງຫາຊີວິດ, ແຕ່ເປັນຄົນຂໍທານທີ່ພະເນຈອນໃນທ້ອງຖະໜົນ. ເພື່ອໃຫ້ພຣະເຈົ້າປັ້ນແຕ່ງພວກເຈົ້າຈົນເຖິງລະດັບທີ່ເຈົ້າຈິນຕະນາການ, ໃຫ້ພວກເຈົ້າທຸກຄົນກົ້ມລົງພື້ນ, ເຊື່ອຢ່າງທີ່ສຸດຄືກັບວ່າເຈົ້າໄດ້ເຫັນນິມິດທີ່ຍິ່ງໃຫຍ່, ສິ່ງນັ້ນຈະເປັນໄປບໍ່ໄດ້! ມັນເປັນໄປບໍ່ໄດ້ ຍ້ອນຜູ້ໜຶ່ງທີ່ບໍ່ໄດ້ເຫັນສິ່ງອັດສະຈັນຂອງພຣະເຈົ້າກໍຈະບໍ່ສາມາດເຊື່ອຢ່າງສົມບູນໃນທຸກສິ່ງທີ່ເຮົາກ່າວ. ເຖິງແມ່ນພວກເຈົ້າຕ້ອງກວດສອບພຣະທຳຂອງເຮົາຢ່າງໃກ້ຊິດ, ພວກເຈົ້າກໍຈະຍັງບໍ່ເຊື່ອພວກມັນທັງໝົດ; ນີ້ແມ່ນທຳມະຊາດຂອງມະນຸດ. ຄົນທີ່ສະແຫວງຫາຄວາມຈິງຈະຜ່ານການປ່ຽນແປງບາງຢ່າງ, ໃນຂະນະທີ່ຄວາມເຊື່ອຂອງຄົນທີ່ບໍ່ສະແຫວງຫາຄວາມຈິງທີ່ເຄີຍປະຕິບັດຜ່ານມາຈະນ້ອຍລົງ ແລະອາດເຖິງກັບຫາຍໄປ. ຄວາມຫຍຸ້ງຍາກທີ່ສຸດກັບພວກເຈົ້າກໍຄື ພວກເຈົ້າບໍ່ສາມາດເຊື່ອໄດ້ຢ່າງສົມບູນໂດຍບໍ່ໄດ້ເຫັນຜົນສຳເລັດຂອງພຣະທຳຂອງພຣະເຈົ້າ ແລະ ເຈົ້າບໍ່ຍອມຮັບໂດຍບໍ່ໄດ້ເຫັນສິ່ງອັດສະຈັນຂອງພຣະອົງ. ຫາກບໍ່ໄດ້ເຫັນສິ່ງດັ່ງກ່າວ, ຜູ້ໃດຈະສາມາດຊື່ສັດຕໍ່ພຣະເຈົ້າຢ່າງທີ່ສຸດໄດ້? ດັ່ງນັ້ນເຮົາຈຶ່ງເວົ້າວ່າ ສິ່ງທີ່ພວກເຈົ້າເຊື່ອບໍ່ແມ່ນພຣະເຈົ້າ, ແຕ່ເປັນສິ່ງອັດສະຈັນ. ບັດນີ້ ເຮົາໄດ້ກ່າວຢ່າງຊັດເຈນເຖິງຫຼາກຫຼາຍຄຸນລັກສະນະຂອງຄວາມຈິງ; ພວກມັນແຕ່ລະຢ່າງແມ່ນສົມບູນ ແລະ ມີຄວາມກ່ຽວພັນຢ່າງໃກ້ຊິດຫຼາຍລະຫວ່າງພວກມັນທັງໝົດ. ພວກເຈົ້າໄດ້ເຫັນພວກມັນ ແລະ ບັດນີ້ ພວກເຈົ້າກໍຕ້ອງນຳພວກມັນເຂົ້າສູ່ການປະຕິບັດ. ມື້ນີ້ ເຮົາໄດ້ສະແດງເສັ້ນທາງແກ່ເຈົ້າ ແລະ ໃນອະນາຄົດ ເຈົ້າກໍຄວນນຳມັນເຂົ້າສູ່ການປະຕິບັດດ້ວຍຕົວເຈົ້າເອງ. ພຣະທຳທີ່ເຮົາກ່າວໃນຕອນນີ້ຮຽກຮ້ອງຜູ້ຄົນ ໂດຍອີງຕາມສະຖານະການທີ່ແທ້ຈິງຂອງພວກເຂົາ ແລະ ເຮົາປະຕິບັດພາລະກິດຕາມຄວາມຕ້ອງການຂອງພວກເຂົາ ແລະ ສິ່ງຕ່າງໆທີ່ຢູ່ພາຍໃນພວກເຂົາ. ພຣະເຈົ້າທີ່ແທ້ຈິງໄດ້ມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດທີ່ເປັນຈິງ ເພື່ອປະຕິບັດພາລະກິດຕາມສະຖານະການ ແລະ ຄວາມຕ້ອງທີ່ແທ້ຈິງຂອງຜູ້ຄົນ. ພຣະອົງບໍ່ໄດ້ໄຮ້ເຫດຜົນ. ເມື່ອພຣະເຈົ້າປະຕິບັດ, ພຣະອົງບໍ່ໄດ້ບັງຄັບຜູ້ຄົນ. ຕົວຢ່າງເຊັ່ນ: ບໍ່ວ່າເຈົ້າຈະໄດ້ແຕ່ງດອງ ຫຼື ບໍ່ ກໍຄວນອີງຕາມຄວາມເປັນຈິງໃນສະຖານະການຂອງເຈົ້າ; ຄວາມຈິງໄດ້ຖືກກ່າວແກ່ເຈົ້າຢ່າງຊັດເຈນ ແລະ ເຮົາບໍ່ໄດ້ຢັບຢັ້ງເຈົ້າ. ຄອບຄົວຂອງບາງຄົນກົດຂີ່ພວກເຂົາ ເພື່ອວ່າພວກເຂົາຈະບໍ່ສາມາດເຊື່ອໃນພຣະເຈົ້າ ຈົນກວ່າພວກເຂົາໄດ້ແຕ່ງດອງ. ໃນລັກສະນະນີ້, ໃນທາງກົງກັນຂ້າມການແຕ່ງດອງຈຶ່ງເປັນປະໂຫຍດສຳລັບພວກເຂົາ. ສຳລັບຄົນອື່ນ, ການແຕ່ງດອງບໍ່ໄດ້ນຳຜົນປະໂຫຍດຫຍັງມາ, ແຕ່ມັນເຮັດໃຫ້ພວກເຂົາສູນເສຍສິ່ງທີ່ພວກເຂົາເຄີຍມີຄັ້ງໜຶ່ງ. ກໍລະນີຂອງເຈົ້າເອງຕ້ອງຖືກກຳນົດໂດຍສະຖານະການຕົວຈິງຂອງເຈົ້າ ແລະ ໂດຍຄວາມຕັ້ງໃຈຂອງເຈົ້າເອງ. ເຮົາບໍ່ໄດ້ຢູ່ທີ່ນີ້ເພື່ອ

ປະຕິດກົດລະບຽບ ແລະ ຂໍ້ກຳນົດເພື່ອຮຽກຮ້ອງຈາກພວກເຈົ້າ. ຫຼາຍຄົນຮ້ອງອອກຢູ່ເລື້ອຍໆວ່າ "ພຣະເຈົ້າເປັນຈິງ; ພາລະກິດຂອງພຣະອົງແມ່ນອີງໃສ່ຄວາມເປັນຈິງ ແລະ ອີງໃສ່ຄວາມເປັນຈິງຂອງສະຖານະການຂອງພວກຂ້ານ້ອຍ", ແຕ່ເຈົ້າຮູ້ບໍວ່າ ໃນຄວາມເປັນຈິງແລ້ວ ແມ່ນຫຍັງເຮັດໃຫ້ມັນເປັນຈິງ? ພໍກັບຄຳເວົ້າທີ່ວ່າງເປົ່າຂອງພວກເຈົ້າ! ພາລະກິດຂອງພຣະເຈົ້າເປັນຈິງ ແລະ ອີງໃສ່ຄວາມເປັນຈິງ; ມັນບໍ່ມີທິດສະດີ, ແຕ່ມັນເປັນອິດສະຫຼະທັງສິ້ນ, ທຸກສິ່ງໃນມັນແມ່ນເປີດເຜີຍ ແລະ ບໍ່ໄດ້ປິດບັງ. ແມ່ນຫຍັງຄືລາຍລະອຽດສະເພາະຂອງຫຼັກການເລັກນ້ອຍເຫຼົ່ານີ້? ເຈົ້າສາມາດເວົ້າໄດ້ບໍ່ວ່າ ພາລະກິດອັນໃດຂອງພຣະເຈົ້າທີ່ເປັນແບບນີ້? ເຈົ້າຕ້ອງເວົ້າຢ່າງລະອຽດ, ເຈົ້າຕ້ອງມີຄຳພະຍານແຫ່ງປະສົບການສອງສາມປະເພດ ແລະ ເຈົ້າຕ້ອງຊັດເຈນຫຼາຍກ່ຽວກັບລັກສະນະນີ້ຂອງພາລະກິດຂອງພຣະເຈົ້າ, ເຈົ້າຕ້ອງຮູ້ຈັກມັນ ແລະ ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະມີຄຸນສົມບັດກ່າວພຣະທຳເຫຼົ່ານີ້. ເຈົ້າສາມາດຕອບໄດ້ບໍ ຖ້າມີຜູ້ໃດຜູ້ໜຶ່ງຖາມເຈົ້າວ່າ: "ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ປະຕິບັດພາລະກິດຫຍັງເທິງແຜ່ນດິນໂລກໃນລະຫວ່າງຍຸກສຸດທ້າຍ? ເປັນຫຍັງພວກເຈົ້າຈຶ່ງເອີ້ນພຣະອົງວ່າພຣະເຈົ້າທີ່ແທ້ຈິງ? ຄຳວ່າ 'ແທ້ຈິງ' ໝາຍເຖິງຫຍັງໃນທີ່ນີ້? ເຈົ້າສາມາດເວົ້າເຖິງພາລະກິດທີ່ແທ້ຈິງຂອງພຣະອົງໄດ້ບໍ, ມັນປະກອບມີຫຍັງໂດຍສະເພາະ? ພຣະເຢຊູແມ່ນພຣະເຈົ້າທີ່ກາຍມາເປັນເນື້ອໜັງ ແລະ ພຣະເຈົ້າແຫ່ງປັດຈຸບັນກໍເປັນພຣະເຈົ້າທີ່ກາຍມາເປັນເນື້ອໜັງເຊັ່ນກັນ, ແລ້ວແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງພຣະອົງທັງສອງ? ແລ້ວແມ່ນຫຍັງຄືຄວາມຄ້າຍຄືກັນ? ພຣະອົງແຕ່ລະອົງໄດ້ປະຕິບັດພາລະກິດຫຍັງ?" ສິ່ງນີ້ລ້ວນແລ້ວແຕ່ກ່ຽວຂ້ອງກັບການເປັນພະຍານ! ຢ່າສັບສົນກ່ຽວກັບສິ່ງເຫຼົ່ານີ້. ມີຄົນອື່ນທີ່ເວົ້າວ່າ: "ພາລະກິດຂອງພຣະເຈົ້າໃນປັດຈຸບັນແມ່ນເປັນຈິງ. ມັນບໍ່ແມ່ນການສຳແດງເຖິງສິ່ງອັດສະຈັນ ແລະ ການອັດສະຈັນເລີຍ". ພຣະອົງບໍ່ໄດ້ປະຕິບັດພາລະກິດແຫ່ງສິ່ງອັດສະຈັນ ແລະ ການອັດສະຈັນແທ້ບໍ? ເຈົ້າໝັ້ນໃຈບໍ? ເຈົ້າຮູ້ບໍວ່າ ພາລະກິດຂອງເຮົາແມ່ນຫຍັງແທ້? ຜູ້ຄົນອາດເວົ້າວ່າ ພຣະອົງບໍ່ໄດ້ປະຕິບັດພາລະກິດແຫ່ງສິ່ງອັດສະຈັນ ແລະ ການອັດສະຈັນ, ແລ້ວພາລະກິດທີ່ພຣະອົງປະຕິບັດ ແລະ ພຣະທຳທີ່ພຣະອົງກ່າວບໍ່ແມ່ນລ້ວນແລ້ວແຕ່ເປັນການອັດສະຈັນບໍ? ຜູ້ຄົນອາດເວົ້າວ່າ ພຣະອົງບໍ່ໄດ້ປະຕິບັດພາລະກິດແຫ່ງສິ່ງອັດສະຈັນ ແລະ ການອັດສະຈັນ, ແຕ່ສິ່ງນີ້ກໍຂຶ້ນຢູ່ກັບວ່າ ມັນຖືກອະທິບາຍແນວໃດ ແລະ ມັນແນໃສ່ຜູ້ໃດ. ໂດຍບໍ່ໄດ້ໄປຄຣິສຕະຈັກ, ພຣະອົງໄດ້ເປີດໂປງສະພາວະຂອງຜູ້ຄົນ ແລະ ໂດຍບໍ່ໄດ້ປະຕິບັດພາລະກິດໃດອື່ນນອກຈາກການກ່າວ, ພຣະອົງກໍໄດ້ກະຕຸ້ນໃຫ້ຜູ້ຄົນກ້າວໄປຂ້າງໜ້າ, ສິ່ງເຫຼົ່ານີ້ບໍ່ແມ່ນສິ່ງອັດສະຈັນບໍ? ດ້ວຍພຣະທຳພຽງຢ່າງດຽວ, ພຣະອົງໄດ້ເອົາຊະນະຜູ້ຄົນ ແລະ ຜູ້ຄົນກໍຍິນດີຕິດຕາມໂດຍບໍ່ມີການຄາດຫວັງ ຫຼື ຄວາມຫວັງ, ນີ້ບໍ່ແມ່ນສິ່ງອັດສະຈັນເຊັ່ນກັນບໍ? ເມື່ອພຣະອົງກ່າວ, ພຣະທຳຂອງພຣະອົງກະຕຸ້ນໃຫ້ເກີດມີຄວາມຮູ້ສຶກບາງຢ່າງໃນຜູ້ຄົນ. ຖ້າພວກເຂົາບໍ່ຮູ້ສຶກປິຕິຍິນດີ ແລ້ວພວກເຂົາກໍຮູ້ສຶກໂສກເສົ້າ; ຖ້າພວກເຂົາບໍ່ຕົກຢູ່ໃນການຫຼໍ່ຫຼອມ ແລ້ວພວກເຂົາກໍຕົກຢູ່ໃນການຂ້ຽນຕີ. ດ້ວຍພຣະທຳທີ່ແຫຼມຄົມເລັກໆນ້ອຍໆເທົ່ານັ້ນ, ພຣະອົງກໍໄດ້ນຳການຂ້ຽນຕີມາສູ່ຜູ້ຄົນ, ນີ້ບໍ່ແມ່ນສິ່ງທີ່ເໜືອທຳມະຊາດບໍ? ມະນຸດສາມາດເຮັດສິ່ງດັ່ງກ່າວນີ້ໄດ້ບໍ? ເຈົ້າໄດ້ອ່ານພຣະທຳຕະຫຼອດເວລາຫຼາຍປີທີ່ຜ່ານມາ, ແຕ່ເຈົ້າບໍ່ເຂົ້າໃຈຫຍັງເລີຍ, ບໍ່ໄດ້ຮັບຄວາມເຂົ້າໃຈ

ຫຍັງເລີຍ; ເຈົ້າບໍ່ສາມາດແຍກຕົນເອງອອກຈາກສິ່ງທີ່ຫຼູ້າສະໄໝ ແລະ ວິທີຄວາມເຊື່ອທີ່ດັ້ງເດີມເຫຼົ່ານັ້ນ. ເຈົ້າບໍ່ມີທາງເຂົ້າໃຈພຣະຄໍາພີໄດ້. ແຕ່ພຣະອົງສາມາດເຂົ້າໃຈພຣະຄໍາພີໄດ້ຢ່າງສົມບູນ, ນີ້ບໍ່ແມ່ນສິ່ງທີ່ເໜືອທໍາມະຊາດບໍ? ຖ້າບໍ່ມີຫຍັງທີ່ເໜືອທໍາມະຊາດກ່ຽວກັບພຣະເຈົ້າເມື່ອພຣະອົງມາເທິງແຜ່ນດິນໂລກ, ພຣະອົງຈະສາມາດເອົາຊະນະພວກເຈົ້າໄດ້ບໍ? ຫາກປາສະຈາກພາລະກິດທີ່ພິເສດ ແລະ ສັກສິດຂອງພຣະອົງ, ຜູ້ໃດທ່າມກາງພວກເຈົ້າຈະເຊື່ອ? ໃນສາຍຕາຂອງເຈົ້າ, ມັນເບິ່ງຄືກັບວ່າ ບຸກຄົນປົກກະຕິກໍາລັງປະຕິບັດພາລະກິດ ແລະ ດໍາລົງຊີວິດຢູ່ກັບພວກເຈົ້າ, ໃນທາງຜິວເຜີນ, ພຣະອົງປາກົດວ່າເປັນບຸກຄົນທີ່ທໍາມະດາ ແລະ ປົກກະຕິ; ສິ່ງທີ່ເຈົ້າເຫັນແມ່ນລັກສະນະພາຍນອກຂອງຄວາມເປັນມະນຸດປົກກະຕິ, ແຕ່ໃນຄວາມເປັນຈິງ ນັ້ນຄືຄວາມເປັນພຣະເຈົ້າທີ່ກໍາລັງປະຕິບັດພາລະກິດ. ມັນບໍ່ແມ່ນຄວາມເປັນມະນຸດປົກກະຕິ, ແຕ່ຄືຄວາມເປັນພຣະເຈົ້າ; ນັ້ນແມ່ນພຣະເຈົ້າເອງທີ່ກໍາລັງປະຕິບັດພາລະກິດ, ພາລະກິດທີ່ພຣະອົງປະຕິບັດໂດຍໃຊ້ຄວາມເປັນມະນຸດທໍາມະດາ. ສະນັ້ນ, ພາລະກິດຂອງພຣະອົງຈຶ່ງທັງທໍາມະດາ ແລະ ເໜືອທໍາມະຊາດ. ພາລະກິດທີ່ພຣະອົງປະຕິບັດບໍ່ສາມາດຖືກປະຕິບັດໂດຍມະນຸດ; ແລະ ຍ້ອນມັນບໍ່ສາມາດຖືກປະຕິບັດໂດຍມະນຸດທໍາມະດາ, ມັນຈຶ່ງຖືກປະຕິບັດໂດຍສິ່ງທີ່ພິເສດ. ເຖິງແນວໃດກໍຕາມ ມັນຄືຄວາມເປັນພຣະເຈົ້າທີ່ພິເສດ, ບໍ່ແມ່ນຄວາມເປັນມະນຸດ; ຄວາມເປັນພຣະເຈົ້າແມ່ນແຕກຕ່າງຈາກຄວາມເປັນມະນຸດ. ບຸກຄົນທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດກໍຍັງມີຄວາມເປັນມະນຸດປົກກະຕິ ແລະ ທໍາມະດາ, ແຕ່ພວກເຂົາບໍ່ສາມາດປະຕິບັດພາລະກິດນີ້ໄດ້. ນີ້ຄືຄວາມແຕກຕ່າງ. ເຈົ້າອາດເວົ້າວ່າ: "ພຣະເຈົ້າບໍ່ແມ່ນພຣະເຈົ້າທີ່ຢູ່ເໜືອທໍາມະຊາດ; ພຣະອົງບໍ່ເຮັດຫຍັງທີ່ຢູ່ເໜືອທໍາມະຊາດ. ພຣະເຈົ້າຂອງພວກຂ້ານ້ອຍກ່າວພຣະທໍາທີ່ແທ້ຈິງ ແລະ ເປັນຈິງ. ພຣະອົງໄດ້ມາທີ່ຄຣິສຕະຈັກເພື່ອປະຕິບັດພາລະກິດທີ່ເປັນຈິງ ແລະ ແທ້ຈິງ. ໃນແຕ່ລະມື້, ພຣະອົງກ່າວກັບພວກຂ້ານ້ອຍຢູ່ເຊິ່ງໜ້າ ແລະ ພຣະອົງຊີ້ໃຫ້ເຫັນສະພາວະຂອງພວກຂ້ານ້ອຍຢູ່ເຊິ່ງໜ້າ, ພຣະເຈົ້າຂອງພວກຂ້ານ້ອຍເປັນຈິງ! ພຣະອົງດໍາລົງຊີວິດກັບພວກຂ້ານ້ອຍ ແລະ ທຸກສິ່ງກ່ຽວກັບພຣະອົງກໍເປັນປົກກະຕິທັງສິ້ນ. ບໍ່ມີຫຍັງໃນການປາກົດຕົວຂອງພຣະອົງບົ່ງບອກວ່າພຣະອົງເປັນພຣະເຈົ້າ. ເຖິງກັບມີເວລາທີ່ພຣະອົງໃຈຮ້າຍ ແລະ ພວກຂ້ານ້ອຍກໍເຫັນເຖິງຄວາມຍິ່ງໃຫຍ່ຂອງຄວາມໂກດຮ້າຍຂອງພຣະອົງ ແລະ ບາງຄັ້ງ ພຣະອົງຍິ້ມ ແລະ ພວກຂ້ານ້ອຍສັງເກດເຫັນຄວາມຍິ້ມແຍ້ມແຈ່ມໃສ່ຂອງພຣະອົງ. ພຣະອົງເປັນພຣະເຈົ້າເອງທີ່ມີຮູບຮ່າງ ແລະ ລັກສະນະ, ຖືກສ້າງຈາກເນື້ອໜັງ ແລະ ເລືອດ, ຜູ້ທີ່ເປັນຈິງ ແລະ ແທ້ຈິງ". ເມື່ອເຈົ້າເປັນພະຍານໃນລັກສະນະນີ້, ມັນຄືພະຍານທີ່ບໍ່ຄົບຖ້ວນ. ມັນຈະເປັນປະໂຫຍດຫຍັງໃຫ້ແກ່ຄົນອື່ນ? ຖ້າເຈົ້າບໍ່ສາມາດເປັນພະຍານເຖິງເລື່ອງລາວພາຍໃນ ແລະ ແກ່ນແທ້ແຫ່ງພາລະກິດຂອງພຣະເຈົ້າເອງ, ແລ້ວ "ຄໍາພະຍານ" ຂອງເຈົ້າກໍບໍ່ສົມຄວນແກ່ການກ່າວເຖິງ!

ການເປັນພະຍານໃຫ້ແກ່ພຣະເຈົ້າຫຼັກໆແມ່ນເລື່ອງການເວົ້າເຖິງຄວາມຮູ້ຂອງເຈົ້າກ່ຽວກັບພາລະກິດຂອງພຣະເຈົ້າ, ວິທີທີ່ພຣະເຈົ້າເອົາຊະນະຜູ້ຄົນ, ວິທີທີ່ພຣະອົງຊ່ວຍຜູ້ຄົນໃຫ້ລອດພົ້ນ, ວິທີທີ່ພຣະອົງປ່ຽນແປງຜູ້ຄົນ; ມັນແມ່ນການເວົ້າເຖິງວິທີທີ່ພຣະອົງນໍາພາຜູ້ຄົນໃຫ້ເຂົ້າສູ່ຄວາມເປັນຈິງແຫ່ງ

ຄວາມຈິງ, ເຮັດໃຫ້ພວກເຂົາຖືກເອົາຊະນະ, ຖືກເຮັດໃຫ້ສົມບູນ ແລະ ຖືກຊ່ວຍໃຫ້ລອດພົ້ນໂດຍພຣະອົງ. ການເປັນພະຍານໝາຍເຖິງການເວົ້າເຖິງພາລະກິດຂອງພຣະອົງ ແລະ ທຸກສິ່ງທີ່ເຈົ້າໄດ້ຜະເຊີນ. ມີພຽງແຕ່ພາລະກິດຂອງພຣະອົງສາມາດເປັນຕົວແທນໃຫ້ແກ່ພຣະອົງ ແລະ ມີພຽງແຕ່ພາລະກິດຂອງພຣະອົງທີ່ສາມາດເປີດເຜີຍພຣະອົງສູ່ສາທາລະນະ, ໃນຄວາມເປັນພຣະອົງທັງໝົດ; ພາລະກິດຂອງພຣະອົງເປັນພະຍານໃຫ້ແກ່ພຣະອົງ. ພາລະກິດຂອງພຣະອົງ ແລະ ພຣະຄຳຂອງພຣະອົງເປັນຕົວແທນໃຫ້ແກ່ພຣະວິນຍານໂດຍກົງ; ພາລະກິດທີ່ພຣະອົງເຮັດແມ່ນຖືກປະຕິບັດໂດຍພຣະວິນຍານ ແລະ ພຣະທຳທີ່ພຣະອົງກ່າວແມ່ນຖືກກ່າວໂດຍພຣະວິນຍານ. ສິ່ງເຫຼົ່ານີ້ພຽງແຕ່ຖືກກ່າວອອກຜ່ານທາງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ, ແຕ່ໃນຄວາມເປັນຈິງ ພວກມັນແມ່ນການສະແດງອອກຂອງພຣະວິນຍານ. ພາລະກິດທຸກຢ່າງທີ່ພຣະອົງເຮັດ ແລະ ພຣະທຳທຸກຂໍ້ທີ່ພຣະອົງກ່າວເປັນຕົວແທນໃຫ້ແກ່ທາດແທ້ຂອງພຣະອົງ. ຫຼັງຈາກທີ່ພຣະອົງສວມໃສ່ເນື້ອໜັງ ແລະ ມາຢູ່ທ່າມກາງມະນຸດ, ຖ້າພຣະເຈົ້າບໍ່ໄດ້ກ່າວ ຫຼື ປະຕິບັດພາລະກິດ ແລະ ຂໍໃຫ້ພວກເຈົ້າຮູ້ຈັກຄວາມເປັນຈິງຂອງພຣະອົງ, ຄວາມເປັນປົກກະຕິຂອງພຣະອົງ ແລະ ອຳນາດອັນໄພສານຂອງພຣະອົງ, ເຈົ້າຈະສາມາດຮູ້ຈັກບໍ? ເຈົ້າຈະສາມາດຮູ້ຈັກໄດ້ບໍວ່າ ແກ່ນແທ້ຂອງພຣະວິນຍານແມ່ນຫຍັງ? ເຈົ້າຈະສາມາດຮູ້ຈັກໄດ້ບໍວ່າຄຸນລັກສະນະຂອງເນື້ອໜັງຂອງພຣະອົງແມ່ນຫຍັງ? ມັນເປັນພຽງຍ້ອນພວກເຈົ້າໄດ້ຜະເຊີນແຕ່ລະບາດກ້າວໃນພາລະກິດຂອງພຣະອົງ, ພຣະອົງຈຶ່ງຂໍໃຫ້ພວກເຈົ້າເປັນພະຍານໃຫ້ແກ່ພຣະອົງ. ຖ້າພວກເຈົ້າປາສະຈາກປະສົບການດັ່ງກ່າວ, ແລ້ວພຣະອົງຈະບໍ່ຂໍໃຫ້ພວກເຈົ້າເປັນພະຍານ. ສະນັ້ນ ເມື່ອເຈົ້າເປັນພະຍານໃຫ້ກັບພຣະເຈົ້າ, ເຈົ້າບໍ່ພຽງແຕ່ເປັນພະຍານເຖິງລັກສະນະພາຍນອກຂອງຄວາມເປັນມະນຸດປົກກະຕິຂອງພຣະອົງ, ແຕ່ຍັງເປັນພະຍານເຖິງພາລະກິດທີ່ພຣະອົງເຮັດ ແລະ ເສັ້ນທາງທີ່ພຣະອົງນຳພາ; ເຈົ້າຕ້ອງເປັນພະຍານເຖິງວິທີທາງທີ່ເຈົ້າຖືກເອົາຊະນະໂດຍພຣະອົງ ແລະ ໃນດ້ານໃດທີ່ເຈົ້າຖືກເຮັດໃຫ້ສົມບູນ. ນີ້ແມ່ນປະເພດຂອງການເປັນພະຍານທີ່ເຈົ້າຄວນມີ. ບ່ອນໃດກໍຕາມທີ່ເຈົ້າໄປ, ຖ້າເຈົ້າຮ້ອງອອກມາວ່າ: "ພຣະເຈົ້າຂອງຂ້ານ້ອຍໄດ້ມາເພື່ອປະຕິບັດພາລະກິດ ແລະ ພາລະກິດຂອງພຣະອົງແມ່ນເປັນຈິງແທ້ໆ! ພຣະອົງໄດ້ຮັບເອົາພວກຂ້ານ້ອຍໂດຍບໍ່ມີການກະທຳທີ່ເໜືອທຳມະຊາດ, ໂດຍປາສະຈາກສິ່ງອັດສະຈັນ ແລະ ການອັດສະຈັນໃດໆເລີຍ!" ຄົນອື່ນຈະຖາມວ່າ: "ເຈົ້າໝາຍຄວາມວ່າແນວໃດ ເມື່ອເຈົ້າເວົ້າວ່າ ພຣະອົງບໍ່ໄດ້ປະຕິບັດສິ່ງອັດສະຈັນ ແລະ ການອັດສະຈັນ? ພຣະອົງຈະສາມາດເອົາຊະນະເຈົ້າໂດຍບໍ່ປະຕິບັດສິ່ງອັດສະຈັນ ແລະ ການອັດສະຈັນໄດ້ແນວໃດ?" ແລ້ວເຈົ້າກໍຈະເວົ້າວ່າ: "ພຣະອົງກ່າວ ແລະ ໂດຍບໍ່ໄດ້ມີການສະແດງການອັດສະຈັນ ຫຼື ສິ່ງອັດສະຈັນເລີຍ, ພຣະອົງໄດ້ເອົາຊະນະພວກຂ້ານ້ອຍ. ພາລະກິດຂອງພຣະອົງໄດ້ເອົາຊະນະພວກຂ້ານ້ອຍ". ໃນທີ່ສຸດແລ້ວ ຖ້າເຈົ້າບໍ່ສາມາດເວົ້າຫຍັງກ່ຽວກັບແກ່ນແທ້, ຖ້າເຈົ້າບໍ່ສາມາດເວົ້າເຖິງສິ່ງທີ່ສະເພາະເຈາະຈົງ, ແລ້ວນີ້ແມ່ນຄຳພະຍານທີ່ແທ້ຈິງບໍ? ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ເອົາຊະນະຜູ້ຄົນ, ມັນຄືພຣະທຳອັນສັກສິດຂອງພຣະອົງທີ່ເຮັດແບບນັ້ນ. ຄວາມເປັນມະນຸດບໍ່ສາມາດເຮັດສິ່ງນີ້ໄດ້; ມັນບໍ່ແມ່ນສິ່ງທີ່ມະນຸດຄົນໃດສາມາດບັນລຸໄດ້ ແລະ ແມ່ນແຕ່ຄົນທີ່ມີຄວາມສາມາດສູງທີ່ສຸດໃນບັນດາ

ຄົນທີ່ປົກກະຕິກໍບໍ່ສາມາດເຮັດສິ່ງນີ້ໄດ້, ຍ້ອນຄວາມເປັນພຣະເຈົ້າຂອງພຣະອົງສູງສົ່ງກວ່າສິ່ງຖືກສ້າງໃດໆ. ສິ່ງນີ້ແມ່ນພິເສດຕໍ່ຜູ້ຄົນ; ເໜືອສິ່ງໃດທັງໝົດ, ພຣະຜູ້ສ້າງແມ່ນສູງສົ່ງກວ່າສິ່ງທີ່ຖືກສ້າງ. ສິ່ງທີ່ຖືກສ້າງບໍ່ສາມາດສູງສົ່ງກວ່າພຣະຜູ້ສ້າງ; ຖ້າເຈົ້າສູງສົ່ງກວ່າພຣະອົງ, ພຣະອົງກໍຈະບໍ່ສາມາດເອົາຊະນະເຈົ້າໄດ້ ແລະ ພຣະອົງພຽງສາມາດເອົາຊະນະເຈົ້າໄດ້ ກໍຍ້ອນພຣະອົງສູງສົ່ງກວ່າເຈົ້າເທົ່ານັ້ນ. ພຣະອົງທີ່ເອົາຊະນະມະນຸດຊາດທັງປວງແມ່ນພຣະຜູ້ສ້າງ ແລະ ບໍ່ມີຜູ້ໃດນອກຈາກພຣະອົງທີ່ສາມາດປະຕິບັດພາລະກິດນີ້ໄດ້. ຄຳເວົ້າເຫຼົ່ານີ້ແມ່ນ "ຄຳພະຍານ", ຄຳພະຍານປະເພດທີ່ເຈົ້າຄວນມີ. ເຈົ້າໄດ້ຜະເຊີນກັບການຂ້ຽນຕີ, ການພິພາກສາ, ການຫຼໍ່ຫຼອມ, ການທົດລອງ, ຄວາມລົ້ມເຫຼວ ແລະ ຄວາມລຳບາກຍາກແຄ້ນ ເທື່ອລະບາດກ້າວ ແລະ ເຈົ້າໄດ້ຖືກເອົາຊະນະ; ເຈົ້າໄດ້ປະວາງຄວາມຄາດຫວັງຈາກເນື້ອໜັງ, ແຮງຈູງໃຈສ່ວນຕົວຂອງເຈົ້າ ແລະ ຜົນປະໂຫຍດສ່ວນຕົວທາງເນື້ອໜັງ. ເວົ້າອີກຢ່າງໜຶ່ງກໍຄື ພຣະທຳຂອງພຣະເຈົ້າໄດ້ເອົາຊະນະຫົວໃຈຂອງເຈົ້າຢ່າງສິ້ນເຊີງ. ເຖິງແມ່ນເຈົ້າບໍ່ໄດ້ເຕີບໃຫຍ່ໃນຊີວິດຂອງເຈົ້າໄດ້ຫຼາຍສໍ່າທີ່ພຣະອົງຮຽກຮ້ອງ, ແຕ່ເຈົ້າກໍຮູ້ທຸກສິ່ງເຫຼົ່ານີ້ ແລະ ເຈົ້າກໍເຊື່ອຢ່າງສິ້ນເຊີງໃນສິ່ງທີ່ພຣະອົງເຮັດ. ສະນັ້ນ ນີ້ຈຶ່ງອາດຖືກເອີ້ນໄດ້ວ່າຄຳພະຍານ, ຄຳພະຍານທີ່ເປັນຈິງ ແລະ ແທ້ຈິງ. ພາລະກິດທີ່ພຣະເຈົ້າໄດ້ມາປະຕິບັດ, ພາລະກິດແຫ່ງການພິພາກສາ ແລະ ການຂ້ຽນຕີ ແມ່ນເພື່ອເອົາຊະນະມະນຸດ, ແຕ່ພຣະອົງຍັງຕ້ອງເຮັດສຳເລັດພາລະກິດຂອງພຣະອົງ, ສິ້ນສຸດຍຸກ ແລະ ປະຕິບັດພາລະກິດແຫ່ງການສິ້ນສຸດ. ພຣະອົງກຳລັງສິ້ນສຸດຍຸກທັງໝົດ, ຊ່ວຍມະນຸດຊາດທັງປວງໃຫ້ລອດພົ້ນ, ໄຖ່ມະນຸດຊາດອອກຈາກຄວາມຜິດບາບເປັນຄັ້ງສຸດທ້າຍ; ພຣະອົງກຳລັງຮັບເອົາມະນຸດຊາດທີ່ພຣະອົງສ້າງຂຶ້ນຢ່າງສົມບູນ. ເຈົ້າຄວນເປັນພະຍານເຖິງທຸກສິ່ງນີ້. ເຈົ້າໄດ້ຜະເຊີນກັບພາລະກິດຫຼາຍຢ່າງຂອງພຣະເຈົ້າ, ເຈົ້າໄດ້ເຫັນມັນດ້ວຍຕາຂອງເຈົ້າເອງ ແລະ ຜະເຊີນມັນຢ່າງເປັນສ່ວນຕົວ; ເມື່ອເຈົ້າໄດ້ໄປເຖິງຈຸດຈົບຢ່າງແທ້ຈິງ, ເຈົ້າກໍຕ້ອງບໍ່ເປັນຄົນທີ່ບໍ່ສາມາດປະຕິບັດໜ້າທີ່ຖືກມອບໝາຍໃຫ້ແກ່ເຈົ້າ. ສິ່ງນັ້ນຊ່າງເປັນຕາສົມເພດແທ້ໆ! ໃນອະນາຄົດ, ເມື່ອຂ່າວປະເສີດຖືກເຜີຍແຜ່, ເຈົ້າກໍຄວນທີ່ຈະສາມາດເວົ້າເຖິງຄວາມຮູ້ຂອງເຈົ້າເອງ, ເປັນພະຍານເຖິງທຸກສິ່ງທີ່ເຈົ້າໄດ້ຮັບໃນຫົວໃຈຂອງເຈົ້າ ແລະ ທຸ້ມເທສຸດກຳລັງ. ນີ້ຄືສິ່ງທີ່ສິ່ງຖືກສ້າງຄວນບັນລຸ. ແມ່ນຫຍັງຄືຄວາມໝາຍທີ່ແທ້ຈິງຂອງຂັ້ນຕອນນີ້ໃນພາລະກິດຂອງພຣະເຈົ້າ? ແມ່ນຫຍັງຄືຜົນສະທ້ອນຂອງມັນ? ແລ້ວມັນຖືກປະຕິບັດໃນມະນຸດໄດ້ຫຼາຍສໍ່າໃດ? ຜູ້ຄົນຄວນເຮັດຫຍັງ? ເມື່ອພວກເຈົ້າສາມາດເວົ້າຢ່າງຊັດເຈນເຖິງພາລະກິດທັງໝົດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ປະຕິບັດຕັ້ງແຕ່ພຣະອົງມາເຖິງແຜ່ນດິນໂລກ, ແລ້ວຄຳພະຍານຂອງເຈົ້າກໍຈະສົມບູນ. ເມື່ອເຈົ້າສາມາດເວົ້າຢ່າງຊັດເຈນເຖິງຫ້າສິ່ງເຫຼົ່ານີ້: ຄວາມໝາຍຂອງພາລະກິດຂອງພຣະອົງ; ເນື້ອຫາຂອງພາລະກິດນັ້ນ; ແກ່ນແທ້ຂອງພາລະກິດນັ້ນ; ອຸປະນິໄສທີ່ພາລະກິດເປັນຕົວແທນໃຫ້; ແລະ ຫຼັກການຂອງພາລະກິດນັ້ນ, ແລ້ວສິ່ງນີ້ກໍຈະພິສູດວ່າ ເຈົ້າສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້, ເຈົ້າມີຄວາມຮູ້ຢ່າງແທ້ຈິງ. ສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າບໍ່ໄດ້ສູງຂະໜາດນັ້ນ ແລະ ສາມາດບັນລຸໄດ້ໂດຍທຸກຄົນທີ່ສະແຫວງຫາຢ່າງແທ້ຈິງ. ຖ້າເຈົ້າຕັ້ງໃຈທີ່ຈະເປັນໜຶ່ງໃນພະຍານຂອງພຣະເຈົ້າ, ເຈົ້າກໍຕ້ອງເຂົ້າໃຈສິ່ງທີ່ພຣະເຈົ້າກຽດຊັງ ແລະ ສິ່ງທີ່ພຣະເຈົ້າຮັກ. ເຈົ້າໄດ້ຜະເຊີນກັບພາລະກິດຫຼາຍ

ຢ່າງຂອງພຣະອົງ; ຜ່ານທາງພາລະກິດນີ້, ເຈົ້າຕ້ອງມາຮູ້ຈັກອຸປະນິໄສຂອງພຣະອົງ, ເຂົ້າໃຈຄວາມປະສົງຂອງພຣະອົງ ແລະ ສິ່ງທີ່ພຣະອົງຮຽກຮ້ອງຈາກມະນຸດຊາດ ແລະ ໃຊ້ຄວາມຮູ້ນີ້ເພື່ອເປັນພະຍານກ່ຽວກັບພຣະອົງ ແລະ ປະຕິບັດໜ້າທີ່ຂອງເຈົ້າ. ເຈົ້າອາດເວົ້າພຽງແຕ່ວ່າ: "ພວກຂ້ານ້ອຍຮູ້ຈັກພຣະເຈົ້າ. ການພິພາກສາ ແລະ ການຂ້ຽນຕີຂອງພຣະອົງແມ່ນຮຸນແຮງຫຼາຍ. ພຣະທຳຂອງພຣະອົງເຄັ່ງຄັດຫຼາຍ; ພຣະທຳເຫຼົ່ານັ້ນຊອບທຳ ແລະ ສະຫງ່າຜ່າເຜີຍ ແລະ ພວກມັນບໍ່ສາມາດຖືກທ້າທາຍໄດ້ໂດຍມະນຸດຄົນໃດໜຶ່ງ", ແຕ່ໃນທີ່ສຸດແລ້ວ ຄຳເວົ້າເຫຼົ່ານີ້ສະໜອງໃຫ້ແກ່ມະນຸດໄດ້ບໍ? ແມ່ນຫຍັງຄືຜົນສະທ້ອນຂອງຄຳເວົ້າເຫຼົ່ານີ້ໃນຜູ້ຄົນ? ເຈົ້າຮູ້ຈັກຢ່າງແທ້ຈິງບໍວ່າ ພາລະກິດແຫ່ງການພິພາກສາ ແລະ ການຂ້ຽນຕີນີ້ມີປະໂຫຍດທີ່ສຸດຕໍ່ເຈົ້າ? ການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າກຳລັງເປີດໂປງຄວາມກະບົດ ແລະ ຄວາມເສື່ອມຊາມຂອງເຈົ້າ, ບໍ່ແມ່ນບໍ? ພວກມັນສາມາດຊຳລະລ້າງ ແລະ ກຳຈັດສິ່ງທີ່ສົກກະປົກ ແລະ ເສື່ອມຊາມເຫຼົ່ານັ້ນທີ່ຢູ່ພາຍໃນເຈົ້າ, ບໍ່ແມ່ນບໍ? ຖ້າບໍ່ມີການພິພາກສາ ແລະ ການຂ້ຽນຕີ, ເຈົ້າຈະກາຍເປັນຫຍັງ? ເຈົ້າຈະຮັບຮູ້ເຖິງຂໍ້ແທ້ຈິງທີ່ຊາຕານໄດ້ເຮັດໃຫ້ເຈົ້າເສື່ອມຊາມຈົນເຖິງລະດັບທີ່ຮຸນແຮງທີ່ສຸດບໍ? ມື້ນີ້ ພວກເຈົ້າຄວນປະກອບຕົນເອງດ້ວຍສິ່ງຕ່າງໆເຫຼົ່ານີ້ ແລະ ຮູ້ຈັກພວກມັນເປັນຢ່າງດີ.

ຄວາມເຊື່ອໃນພຣະເຈົ້າໃນຍຸກປັດຈຸບັນບໍ່ແມ່ນຄວາມເຊື່ອທີ່ເຈົ້າອາດຈິນຕະນາການ ນັ້ນກໍຄືມັນພຽງພໍທີ່ຈະອ່ານພຣະທຳຂອງພຣະເຈົ້າ, ອະທິຖານ, ຮ້ອງເພງ, ເຕັ້ນລຳ, ປະຕິບັດໜ້າທີ່ຂອງເຈົ້າ ແລະ ໃຊ້ຊີວິດຄວາມເປັນມະນຸດທີ່ປົກກະຕິ. ຄວາມເຊື່ອສາມາດງ່າຍດາຍແບບນັ້ນແທ້ບໍ? ຜົນຮັບຄືກະແຈສຳຄັນ. ມັນບໍ່ກ່ຽວກັບວ່າມີຈັກວິທີທີ່ເຈົ້າມີເພື່ອເຮັດສິ່ງຕ່າງໆ; ກົງກັນຂ້າມ ມັນກ່ຽວກັບວ່າເຈົ້າຈະສາມາດບັນລຸຜົນທີ່ດີທີ່ສຸດໄດ້ຢ່າງແທ້ຈິງແນວໃດ. ເຈົ້າອາດສາມາດທີ່ຈະຍົກພຣະທຳຂອງພຣະເຈົ້າຂຶ້ນ ແລະ ອະທິບາຍຢ່າງລະອຽດເຖິງຄວາມຮູ້ບາງຢ່າງຂອງເຈົ້າ, ແຕ່ເມື່ອເຈົ້າປະວາງພວກມັນໄວ້ທາງຂ້າງ, ເຈົ້າກໍບໍ່ມີຫຍັງໃຫ້ເວົ້າ. ສິ່ງນີ້ສະແດງວ່າ ເຈົ້າພຽງແຕ່ສາມາດເວົ້າເຖິງຕົວອັກສອນ ແລະ ທິດສະດີ ແຕ່ຂາດຄວາມຮູ້ໃນປະສົບການ. ມື້ນີ້ ມັນຈະບໍ່ເກີດຜົນ ຖ້າເຈົ້າລົ້ມເຫຼວທີ່ຈະເຂົ້າໃຈເຖິງສິ່ງທີ່ສຳຄັນ, ນີ້ຄືສິ່ງທີ່ສຳຄັນຫຼາຍສຳລັບການເຂົ້າສູ່ຄວາມເປັນຈິງ! ໃຫ້ເລີ່ມຕົ້ນຝຶກຕົນເອງດັ່ງນີ້: ກ່ອນອື່ນ ໃຫ້ອ່ານພຣະທຳຂອງພຣະເຈົ້າ; ໃຫ້ມາຮູ້ຈັກຄຳສັບຝ່າຍວິນຍານໃນພຣະທຳຂອງພຣະເຈົ້າເປັນຢ່າງດີ; ໃຫ້ຄົ້ນຫານິມິດຫຼັກທີ່ຢູ່ພາຍໃນພຣະທຳເຫຼົ່ານັ້ນ; ໃຫ້ລະບຸສ່ວນຕ່າງໆທີ່ກ່ຽວຂ້ອງກັບການປະຕິບັດ; ໃຫ້ດຶງທຸກອົງປະກອບເຫຼົ່ານີ້ມາຮ່ວມກັນ ເທື່ອບາດກ້າວ; ໃຫ້ເຂົ້າສູ່ອົງປະກອບເຫຼົ່ານີ້ພາຍໃນປະສົບການຂອງເຈົ້າ. ສິ່ງເຫຼົ່ານີ້ແມ່ນສິ່ງສຳຄັນທີ່ເຈົ້າຕ້ອງເຂົ້າໃຈ. ການປະຕິບັດທີ່ສຳຄັນທີ່ສຸດໃນເວລາກິນ ແລະ ດື່ມພຣະທຳຂອງພຣະເຈົ້າກໍຄືສິ່ງນີ້: ເມື່ອໄດ້ອ່ານບົດໃນພຣະທຳຂອງພຣະເຈົ້າ, ເຈົ້າຕ້ອງສາມາດທີ່ຈະລະບຸສ່ວນທີ່ສຳຄັນທີ່ກ່ຽວກັບນິມິດ ແລະ ເຈົ້າຍັງຕ້ອງສາມາດທີ່ຈະລະບຸສ່ວນທີ່ສຳຄັນທີ່ກ່ຽວຂ້ອງກັບການປະຕິບັດ; ໃຫ້ໃຊ້ນິມິດເປັນພື້ນຖານ ແລະ ໃຊ້ການປະຕິບັດເປັນຕົວນຳທາງໃນຊີວິດຂອງເຈົ້າ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ພວກເຈົ້າຂາດທີ່ສຸດ ແລະ ເປັນຄວາມຫຍຸ້ງຍາກຢ່າງໃຫຍ່ທີ່ສຸດຂອງພວກເຈົ້າ; ໃນຫົວໃຈຂອງພວກເຈົ້າ, ຫາຍາກທີ່ພວກເຈົ້າຈະໃຫ້ຄວາມສົນໃຈແກ່ສິ່ງເຫຼົ່ານີ້. ໂດຍ

ລວມແລ້ວ, ພວກເຈົ້າທຸກຄົນຢູ່ພາຍໃນສະພາວະທີ່ຂີ້ຄ້ານ, ບໍ່ມີແຮງຈູງໃຈ, ບໍ່ເຕັມໃຈທີ່ຈະເສຍສະຫຼະເປັນການສ່ວນຕົວ; ຫຼື ພວກເຈົ້າລໍຖ້າຢ່າງຂີ້ຄ້ານ ແລະ ບາງຄົນເຖິງກັບຕໍ່ວ່າ; ພວກເຂົາບໍ່ເຂົ້າໃຈເປົ້າໝາຍ ແລະ ຄວາມໝາຍຂອງພາລະກິດຂອງພຣະເຈົ້າ ແລະ ມັນຍາກທີ່ຈະໃຫ້ພວກເຂົາສະແຫວງຫາຄວາມຈິງ. ຜູ້ຄົນດັ່ງກ່າວກຽດຊັງຄວາມຈິງ ແລະ ຈະຖືກກຳຈັດໃນທີ່ສຸດ. ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ສາມາດຖືກເຮັດໃຫ້ສົມບູນ ແລະ ບໍ່ມີຜູ້ໃດສາມາດຢູ່ລອດໄດ້. ຖ້າຜູ້ຄົນບໍ່ມີຄວາມຕັ້ງໃຈແມ່ນແຕ່ໜ້ອຍດຽວທີ່ຈະຕໍ່ຕ້ານອຳນາດຂອງຊາຕານ, ແລ້ວພວກເຂົາກໍສິ້ນຫວັງ!

ຕອນນີ້ ບໍ່ວ່າການສະແຫວງຫາຂອງພວກເຈົ້າຈະມີປະສິດທິພາບ ຫຼື ບໍ່ແມ່ນຖືກວັດແທກໂດຍສິ່ງທີ່ພວກເຈົ້າມີໃນປັດຈຸບັນ. ນີ້ແມ່ນສິ່ງທີ່ຖືກໃຊ້ເພື່ອກຳນົດຜົນຕາມມາຂອງພວກເຈົ້າ; ນີ້ໝາຍຄວາມວ່າ ຜົນຕາມມາຂອງພວກເຈົ້າແມ່ນຖືກເປີດເຜີຍອອກໃນການເສຍສະຫຼະທີ່ພວກເຈົ້າໄດ້ເຮັດ ແລະ ສິ່ງຕ່າງໆທີ່ພວກເຈົ້າໄດ້ເຮັດ. ຜົນຕາມມາຂອງພວກເຈົ້າຈະຖືກເຮັດໃຫ້ເປັນທີ່ຮູ້ຈັກຈາກການສະແຫວງຫາຂອງພວກເຈົ້າ, ຄວາມເຊື່ອຂອງພວກເຈົ້າ ແລະ ສິ່ງທີ່ພວກເຈົ້າໄດ້ເຮັດ. ໃນບັນດາພວກເຈົ້າທັງໝົດ, ມີຫຼາຍຄົນທີ່ເກີນຄວາມລອດພົ້ນ, ຍ້ອນມື້ນີ້ເປັນມື້ທີ່ເປີດເຜີຍຜົນຕາມມາຂອງຜູ້ຄົນ ແລະ ເຮົາຈະບໍ່ສືບສົນໃນພາລະກິດຂອງເຮົາ; ເຮົາຈະບໍ່ນຳພາຄົນທີ່ເກີນຄວາມລອດພົ້ນໄປສູ່ຍຸກຕໍ່ໄປ. ຈະມີເວລາທີ່ພາລະກິດຂອງເຮົາສຳເລັດ. ເຮົາຈະບໍ່ປະຕິບັດພາລະກິດໃນຊາກສົບທີ່ເໝັນເນົ່າ ແລະ ໄຮ້ວິນຍານທີ່ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ເລີຍ; ຕອນນີ້ແມ່ນຍຸກສຸດທ້າຍແຫ່ງຄວາມລອດພົ້ນຂອງມະນຸດ ແລະ ເຮົາຈະບໍ່ປະຕິບັດພາລະກິດທີ່ໄຮ້ປະໂຫຍດ. ຢ່າກ່າວໂທດສະຫວັນ ແລະ ແຜ່ນດິນໂລກ, ຈຸດຈົບຂອງໂລກໃກ້ເຂົ້າມາແລ້ວ. ມັນຫຼີກເວັ້ນບໍ່ໄດ້. ສິ່ງຕ່າງໆໄດ້ມາເຖິງຈຸດນີ້ ແລະ ບໍ່ມີຫຍັງທີ່ເຈົ້າໃນຖານະມະນຸດຈະສາມາດເຮັດໄດ້ເພື່ອຢຸດພວກມັນ; ເຈົ້າບໍ່ສາມາດປ່ຽນແປງສິ່ງຕ່າງໆຕາມທີ່ເຈົ້າປາຖະໜາ. ມື້ວານ, ເຈົ້າບໍ່ໄດ້ຈ່າຍລາຄາເພື່ອສະແຫວງຫາຄວາມຈິງ ແລະ ເຈົ້າບໍ່ໄດ້ຊື່ສັດ; ມື້ນີ້ ເວລາໄດ້ມາເຖິງ ເຈົ້າເກີນທີ່ຈະໄດ້ຮັບຄວາມລອດພົ້ນ; ແລະ ມື້ອື່ນ ເຈົ້າຈະຖືກກຳຈັດ ແລະ ຈະບໍ່ມີທາງເວັ້ນສຳລັບຄວາມລອດພົ້ນຂອງເຈົ້າ. ເຖິງແມ່ນຫົວໃຈຂອງເຮົາອ່ອນໂຍນ ແລະ ເຮົາກຳລັງເຮັດສຸດຄວາມສາມາດຂອງເຮົາເພື່ອຊ່ວຍເຈົ້າໃຫ້ລອດພົ້ນ, ຖ້າເຈົ້າບໍ່ພະຍາຍາມໃນສ່ວນຂອງເຈົ້າເອງ ຫຼື ຄິດຄຳນຶງເຖິງຕົວເຈົ້າເອງ, ສິ່ງນີ້ຈະກ່ຽວຫຍັງກັບເຮົາ? ຄົນທີ່ຄິດເຖິງພຽງແຕ່ເນື້ອໜັງຂອງພວກເຂົາ ແລະ ຄົນທີ່ມັກຄວາມສະບາຍ; ຄົນທີ່ເບິ່ງຄືເຊື່ອ ແຕ່ບໍ່ໄດ້ເຊື່ອແທ້ໆ; ຄົນທີ່ເຂົ້າຮ່ວມໃນການເຮັດຢາ ແລະ ເວດມົນທີ່ຊົ່ວຮ້າຍ; ຄົນທີ່ຜິດສິນທຳ, ໃຈແຕກ ແລະ ສົກກະປົກ; ຄົນທີ່ລັກເຄື່ອງຖວາຍແກ່ພຣະເຢໂຮວາ ແລະ ສິ່ງຂອງໆພຣະອົງ; ຄົນທີ່ຮັກການຕິດສິນບົນ; ຄົນທີ່ຝັນຢ່າງຂີ້ຄ້ານເຖິງການຂຶ້ນສູ່ສະຫວັນ; ຄົນທີ່ອວດດີ ແລະ ທະນົງຕົວ; ຄົນທີ່ພຽງແຕ່ພະຍາຍາມຫາຊື່ສຽງ ແລະ ໂຊກລາບສ່ວນຕົວ; ຄົນທີ່ເຜີຍແຜ່ຄຳເວົ້າທີ່ບໍ່ສຸພາບ; ຄົນທີ່ໝິ່ນປະໝາດພຣະເຈົ້າເອງ; ຄົນທີ່ບໍ່ເຮັດຫຍັງນອກຈາກຕັດສິນ ແລະ ກ່າວຮ້າຍພຣະເຈົ້າເອງ; ຄົນທີ່ກໍ່ຕັ້ງກຸ່ມພັກພວກ ແລະ ສະແຫວງຫາຄວາມເປັນເອກະລາດ; ຄົນທີ່ຍົກຍ້ອງຕົນເອງເໜືອພຣະເຈົ້າ; ຊາຍ ແລະ ຍິງໜຸ່ມ, ໄວກາງຄົນ ແລະ ໄວອາວຸໂສທີ່ໄຮ້ຄ່າ ຜູ້ເຊິ່ງຕິດກັບດັກໃນກິເລດຕັນຫາ; ຊາຍ ແລະ ຍິງທີ່ເພີດເພີນກັບຊື່ສຽງສ່ວນຕົວ

ແລະ ໂຊກລາບ ແລະ ສະແຫວງຫາສະຖານະສ່ວນຕົວທ່າມກາງຄົນອື່ນໆ; ຄົນທີ່ບໍ່ສຳນຶກຜິດທີ່ຕິດກັບດັກຢູ່ໃນຄວາມຜິດບາບ, ພວກເຂົາທັງໝົດບໍ່ໄດ້ເກີນຄວາມລອດພົ້ນບໍ? ຄວາມຜິດສິນທຳ, ຄວາມຜິດບາບ, ຢາທີ່ຊົ່ວຮ້າຍ, ເວດມົນ, ຄຳເວົ້າທີ່ຫຍາບຄາຍ ແລະ ຄຳເວົ້າບໍ່ສຸພາບລ້ວນແລ້ວແຕ່ກຳລັງຈະລາຈົນທ່າມກາງພວກເຈົ້າ; ແລະ ຄວາມໄວ້ວາງໃຈ ແລະ ຄຳເວົ້າແຫ່ງຊີວິດແມ່ນຖືກຢຽບຢໍ່າໃນບັນດາພວກເຈົ້າ ແລະ ພາສາບໍລິສຸດໄດ້ຖືກເຮັດໃຫ້ເປິເປື້ອນໃນບັນດາພວກເຈົ້າ. ພວກເຈົ້າທີ່ເປັນຊາວຕ່າງຊາດ ທີ່ເຕັມໄປດ້ວຍຄວາມສົກກະປົກ ແລະ ຄວາມບໍ່ເຊື່ອຟັງ! ຜົນຕາມມາສຸດທ້າຍຂອງພວກເຈົ້າຈະແມ່ນຫຍັງ? ຄົນທີ່ຮັກເນື້ອໜັງ, ຜູ້ທີ່ປະຕິບັດເວດມົນຂອງເນື້ອໜັງ ແລະ ຜູ້ທີ່ຕິດກັບດັກໃນຄວາມຜິດບາບຈາກຕັນຫາຈະສາມາດໜ້າດ້ານສືບຕໍ່ດຳລົງຊີວິດໄດ້ແນວໃດ! ເຈົ້າບໍ່ຮູ້ຈັກບໍວ່າຜູ້ຄົນແບບພວກເຈົ້າແມ່ນໝອນທີ່ເກີນຄວາມລອດພົ້ນ? ເຈົ້າມີສິດຫຍັງທີ່ຈະຮຽກຮ້ອງນີ້ ແລະ ນັ້ນ? ຈົນເຖິງປັດຈຸບັນ, ບໍ່ໄດ້ມີການປ່ຽນແປງແມ່ນແຕ່ໜ້ອຍດຽວໃນຄົນທີ່ບໍ່ຮັກຄວາມຈິງ ແລະ ພຽງແຕ່ຮັກເນື້ອໜັງ, ຜູ້ຄົນດັ່ງກ່າວຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ແນວໃດ? ຄົນທີ່ບໍ່ຮັກຫົນທາງແຫ່ງຊີວິດ, ຄົນທີ່ບໍ່ຍົກຍ້ອງພຣະເຈົ້າ ແລະ ເປັນພະຍານໃຫ້ແກ່ພຣະອົງ, ຜູ້ທີ່ວາງອຸບາຍເພື່ອເຫັນແກ່ສະຖານະຂອງພວກເຂົາເອງ, ຜູ້ທີ່ຍົກຍໍຕົນເອງ, ພວກເຂົາບໍ່ໄດ້ເປັນຄືເກົ່າບໍ ແມ່ນແຕ່ໃນປັດຈຸບັນ? ແມ່ນຫຍັງຄືຄຸນຄ່າໃນການຊ່ວຍພວກເຂົາໃຫ້ລອດພົ້ນ? ບໍ່ວ່າເຈົ້າຈະສາມາດຖືກຊ່ວຍໃຫ້ລອດພົ້ນ ຫຼື ບໍ່ ແມ່ນບໍ່ໄດ້ຂຶ້ນກັບວ່າຄວາມອາວຸໂສຂອງເຈົ້າມີຫຼາຍສໍ່າໃດ ຫຼື ເຈົ້າໄດ້ປະຕິບັດພາລະກິດຈັກປີແລ້ວ ແລະ ແຮງໄກທີ່ມັນຈະຂຶ້ນກັບວ່າເຈົ້າໄດ້ສ້າງຄວາມໜ້າເຊື່ອຖືຫຼາຍສໍ່າໃດ. ກົງກັນຂ້າມ ມັນຂຶ້ນກັບວ່າການສະແຫວງຫາຂອງເຈົ້າໄດ້ເກີດຜົນ ຫຼື ບໍ່. ເຈົ້າຄວນຮູ້ຈັກວ່າ ຄົນທີ່ຖືກຊ່ວຍໃຫ້ລອດພົ້ນແມ່ນ "ຕົ້ນໄມ້" ທີ່ອອກໝາກ, ບໍ່ແມ່ນຕົ້ນໄມ້ທີ່ມີໃບຂຽວງາມ ແລະ ເຕັມໄປດ້ວຍດອກ ແຕ່ບໍ່ໄດ້ເກີດໝາກຫຍັງເລີຍ. ເຖິງແມ່ນເຈົ້າໄດ້ໃຊ້ເວລາຫຼາຍປີເພື່ອພະເນຈອນຕາມທ້ອງຖະໜົນ, ມັນສຳຄັນຫຍັງ? ຄຳພະຍານຂອງເຈົ້າຢູ່ໃສ? ຄວາມເຄົາລົບຂອງເຈົ້າທີ່ມີຕໍ່ພຣະເຈົ້າແມ່ນມີໜ້ອຍກວ່າຄວາມຮັກຂອງເຈົ້າທີ່ມີຕໍ່ຕົນເອງ ແລະ ຄວາມປາຖະໜາທີ່ເຕັມໄປດ້ວຍຕັນຫາຂອງເຈົ້າ, ບຸກຄົນປະເພດນີ້ບໍ່ແມ່ນຄົນທີ່ເສື່ອມຊາມບໍ? ພວກເຂົາຈະສາມາດເປັນຕົ້ນແບບ ແລະ ແບບຢ່າງສຳລັບຄວາມລອດພົ້ນໄດ້ແນວໃດ? ທຳມະຊາດຂອງເຈົ້າແມ່ນບໍ່ສາມາດແກ້ໄຂໄດ້, ເຈົ້າກະບົດເກີນໄປ, ເຈົ້າເກີນທີ່ຈະໄດ້ຮັບຄວາມລອດພົ້ນ! ຜູ້ຄົນດັ່ງກ່າວບໍ່ແມ່ນຄົນທີ່ຈະຖືກກຳຈັດບໍ? ເວລາທີ່ພາລະກິດຂອງເຮົາສຳເລັດບໍ່ແມ່ນເວລາແຫ່ງການມາເຖິງຂອງວັນສຸດທ້າຍຂອງເຈົ້າບໍ? ເຮົາໄດ້ປະຕິບັດພາລະກິດຫຼາຍຢ່າງ ແລະ ກ່າວພຣະທຳຫຼາຍຂໍ້ທ່າມກາງພວກເຈົ້າ, ມີຈັກຂໍ້ທີ່ໄດ້ເຂົ້າຫູຂອງພວກເຈົ້າແທ້ໆ? ມີຈັກຂໍ້ທີ່ພວກເຈົ້າໄດ້ເຊື່ອຟັງ? ເມື່ອພາລະກິດຂອງເຮົາສິ້ນສຸດລົງ, ນັ້ນຈະເປັນເວລາທີ່ເຈົ້າເຊົາຕໍ່ຕ້ານເຮົາ, ເວລາທີ່ເຈົ້າເຊົາຢືນຂັດຂວາງເຮົາ. ໃນເວລາທີ່ເຮົາປະຕິບັດພາລະກິດ, ພວກເຈົ້າກໍປະພຶດຕໍ່ຕ້ານເຮົາຢ່າງຕໍ່ເນື່ອງ; ພວກເຈົ້າບໍ່ເຄີຍປະຕິບັດຕາມພຣະທຳຂອງເຮົາຈັກເທື່ອ. ເຮົາປະຕິບັດພາລະກິດຂອງເຮົາ ແລະ ເຈົ້າປະຕິບັດ "ພາລະກິດ" ຂອງເຈົ້າເອງ, ສ້າງອານາຈັກນ້ອຍໆຂອງເຈົ້າເອງ. ພວກເຈົ້າບໍ່ໄດ້ເປັນຫຍັງເລີຍນອກຈາກກຸ່ມໝາໄນ ແລະ ໝາ, ເຮັດທຸກສິ່ງເພື່ອຕໍ່ຕ້ານເຮົາ! ເຈົ້າພະຍາຍາມຢູ່ສະເໝີທີ່ຈະນຳເອົາຄົນ

ທີ່ມອບຄວາມຮັກໃຫ້ເຈົ້າທັງໝົດເຂົ້າສູ່ອ້ອມກອດຂອງເຈົ້າ, ຄວາມເຄົາລົບນັບຖືຂອງເຈົ້າມີຢູ່ໃສ? ທຸກສິ່ງທີ່ເຈົ້າເຮັດແມ່ນຫຼອກລວງ! ເຈົ້າບໍ່ມີຄວາມເຊື່ອຟັງ ຫຼື ຄວາມເຄົາລົບນັບຖື ແລະ ທຸກສິ່ງທີ່ເຈົ້າເຮັດແມ່ນຫຼອກລວງ ແລະ ໝິ່ນປະໝາດ! ຜູ້ຄົນດັ່ງກ່າວຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ບໍ? ຜູ້ຊາຍທີ່ຜິດສິນທຳ ແລະ ເຕັມໄປດ້ວຍຕັນຫາທາງເພດຕ້ອງການສະເໜີທີ່ຈະດຶງດູດໂສເພນີທີ່ຍົ້ວເຍົ້າມາຫາພວກເຂົາເພື່ອຄວາມສຸກຂອງພວກເຂົາເອງ. ເຮົາຈະບໍ່ຊ່ວຍມານຮ້າຍທີ່ຜິດສິນທຳທາງເພດແບບນັ້ນໃຫ້ລອດພົ້ນຢ່າງເດັດຂາດ. ເຮົາກຽດຊັງພວກເຈົ້າ ມານຮ້າຍທີ່ສົກກະປົກ ແລະ ຄວາມເຕັມໄປດ້ວຍຕັນຫາ ແລະ ຄວາມຍົ້ວຍວນຂອງພວກເຈົ້າຈະເຮັດໃຫ້ພວກເຈົ້າຈົມລົງສູ່ນະຮົກ. ພວກເຈົ້າມີຫຍັງໃຫ້ແກ້ຕົວບໍ່? ພວກເຈົ້າ ມານຮ້າຍທີ່ສົກກະປົກ ແລະ ວິນຍານທີ່ຊົ່ວຮ້າຍແມ່ນເປັນຕາລັງກຽດ! ພວກເຈົ້າເປັນຕາຂີ້ດຽດ! ຂີ້ເຫຍື້ອແບບນີ້ຈະຖືກຊ່ວຍໃຫ້ລອດພົ້ນໄດ້ແນວໃດ? ພວກເຂົາທີ່ຕິດກັບດັກໃນຄວາມຜິດບາບຈະຍັງສາມາດຖືກຊ່ວຍໃຫ້ລອດພົ້ນບໍ? ມື້ນີ້ ຄວາມຈິງນີ້, ຫົນທາງນີ້ ແລະຊີວິດນີ້ບໍ່ໄດ້ດຶງດູດໃຈພວກເຈົ້າ; ກົງກັນຂ້າມ ພວກເຈົ້າຖືກດຶງດູດຫາຄວາມຜິດບາບ; ຫາເງິນ; ຫາຖານະ, ຊື່ສຽງ ແລະ ຜົນປະໂຫຍດ; ຫາຄວາມສຸກທາງເນື້ອໜັງ; ຫາຄວາມເຈົ້າຊູ້ຂອງຜູ້ຊາຍ ແລະສະເໜ່ຂອງແມ່ຍິງ. ແມ່ນຫຍັງເຮັດໃຫ້ພວກເຈົ້າມີຄຸນສົມບັດທີ່ຈະເຂົ້າສູ່ອານາຈັກຂອງເຮົາ? ພາບລັກຂອງພວກເຈົ້າເຖິງກັບຍິ່ງໃຫຍ່ກວ່າພຣະເຈົ້າ, ສະຖານະຂອງພວກເຈົ້າເຖິງກັບສູງສົ່ງກວ່າພຣະເຈົ້າ, ດ້ານກຽດຊື່ສຽງຂອງພວກເຈົ້າໃນທ່າມກາງມະນຸດແມ່ນບໍ່ຕ້ອງເວົ້າເຖິງ, ພວກເຈົ້າໄດ້ກາຍມາເປັນຮູບປັ້ນທີ່ຜູ້ຄົນບູຊາ. ເຈົ້າບໍ່ໄດ້ກາຍມາເປັນອັກຄະເທວະດາບໍ? ເມື່ອຜົນຕາມມາຂອງຜູ້ຄົນຖືກເປີດເຜີຍເຊິ່ງຍັງເປັນເວລາທີ່ພາລະກິດແຫ່ງຄວາມລອດພົ້ນໃກ້ຈະເຖິງຈຸດສິ້ນສຸດຂອງມັນ, ຫຼາຍຄົນໃນບັນດາພວກເຈົ້າຈະເປັນຊາກສົບທີ່ເກີນຄວາມລອດພົ້ນ ແລະ ຕ້ອງຖືກກຳຈັດ. ໃນລະຫວ່າງພາລະກິດແຫ່ງຄວາມລອດພົ້ນ, ເຮົາກະລຸນາ ແລະ ດີຕໍ່ທຸກຄົນ. ເມື່ອພາລະກິດສິ້ນສຸດລົງ, ຜົນຕາມມາຂອງຜູ້ຄົນປະເພດທີ່ແຕກຕ່າງກັນກໍຈະຖືກເປີດເຜີຍ ແລະ ໃນເວລານັ້ນ ເຮົາຈະບໍ່ກະລຸນາ ແລະ ດີອີກຕໍ່ໄປ, ຍ້ອນຜົນຕາມມາຂອງຜູ້ຄົນຈະໄດ້ຖືກເປີດເຜີຍອອກ ແລະ ແຕ່ລະຄົນກໍຈະໄດ້ຖືກຈັດອອກຕາມປະເພດຂອງພວກເຂົາ ແລະ ຈະບໍ່ເກີດປະໂຫຍດຫຍັງໃນການປະຕິບັດພາລະກິດແຫ່ງຄວາມລອດພົ້ນອີກ ຍ້ອນຍຸກແຫ່ງຄວາມລອດພົ້ນຈະຜ່ານໄປ ແລະ ເມື່ອຜ່ານໄປແລ້ວ ມັນກໍຈະບໍ່ກັບຄືນມາ.

# ການປະຕິບັດ (8)

ພວກເຈົ້າຍັງບໍ່ເຂົ້າໃຈຄວາມຈິງໃນຫຼາຍດ້ານ ແລະ ຍັງມີຂໍ້ຜິດພາດ ແລະ ການອອກນອກຮູ້ນອກທາງຫຼາຍພໍສົມຄວນໃນການປະຕິບັດຂອງພວກເຈົ້າ; ໃນຫຼາຍໆຂອບເຂດ, ພວກເຈົ້າດຳລົງຊີວິດໂດຍແນວຄິດ ແລະ ຈິນຕະນາການຂອງພວກເຈົ້າເອງ, ບໍ່ສາມາດເຂົ້າໃຈຫຼັກການປະຕິບັດຈັກເທື່ອ. ສະນັ້ນ ມັນຈຶ່ງຍັງຈຳເປັນທີ່ຈະນຳພາຜູ້ຄົນໃຫ້ເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ; ເວົ້າອີກຢ່າງໜຶ່ງກໍຄື ເພື່ອພວກເຂົາຈະສາມາດຄວບຄຸມຊີວິດຝ່າຍເນື້ອໜັງ ແລະ ຝ່າຍວິນຍານຂອງພວກເຂົາໄດ້, ນຳທັງສອງດ້ານເຂົ້າສູ່ການປະຕິບັດ ແລະ ເພື່ອວ່າ ພວກເຂົາຈະບໍ່ຕ້ອງຖືກເບິ່ງແຍງ ຫຼື ນຳພາຢູ່ເລື້ອຍໆ. ພຽງເມື່ອນັ້ນ ພວກເຂົາຈຶ່ງຈະມີວຸດທິພາວະທີ່ແທ້ຈິງ. ແລ້ວເຖິງແມ່ນບໍ່ມີຜູ້ໃດນຳພາເຈົ້າໃນອະນາຄົດ, ເຈົ້າກໍຍັງຈະສາມາດຜະເຊີນດ້ວຍຕົວເຈົ້າເອງ. ໃນປັດຈຸບັນ ຖ້າເຈົ້າເຂົ້າໃຈວ່າ ດ້ານໃດຂອງຄວາມຈິງທີ່ຈຳເປັນ ແລະ ດ້ານໃດທີ່ບໍ່ຈຳເປັນ, ໃນອະນາຄົດ ເຈົ້າກໍຈະສາມາດເຂົ້າສູ່ຄວາມເປັນຈິງໄດ້. ໃນປັດຈຸບັນ, ພວກເຈົ້າກຳລັງຖືກນຳພາສູ່ເສັ້ນທາງທີ່ຖືກຕ້ອງ, ເຮັດໃຫ້ພວກເຈົ້າເຂົ້າໃຈຄວາມຈິງຫຼາຍຢ່າງ ແລະໃນອະນາຄົດ ພວກເຈົ້າຈະສາມາດເຂົ້າໃຈໄດ້ຢ່າງເລິກເຊິ່ງຍິ່ງຂຶ້ນ. ສາມາດເວົ້າໄດ້ວ່າ ສິ່ງທີ່ຜູ້ຄົນກຳລັງຖືກເຮັດໃຫ້ເຂົ້າໃຈໃນຕອນນີ້ແມ່ນຫົນທາງທີ່ບໍລິສຸດທີ່ສຸດ. ໃນປັດຈຸບັນ, ເຈົ້າກຳລັງຖືກນຳພາສູ່ເສັ້ນທາງທີ່ຖືກຕ້ອງ ແລະ ເມື່ອມື້ໜຶ່ງ ບໍ່ມີຜູ້ໃດນຳພາເຈົ້າ, ເຈົ້າກໍຈະປະຕິບັດ ແລະ ກ້າວໄປຢ່າງໄກຕາມເສັ້ນທາງທີ່ບໍລິສຸດທີ່ສຸດຂອງເສັ້ນທາງທັງໝົດ. ໃນປັດຈຸບັນ, ຜູ້ຄົນກຳລັງຖືກເຮັດໃຫ້ເຂົ້າໃຈວ່າການປະຕິບັດແບບໃດຈຶ່ງຖືກຕ້ອງ ແລະ ການປະຕິບັດແບບໃດທີ່ອອກນອກຮູ້ນອກທາງ. ຫຼັງຈາກທີ່ເຂົ້າໃຈສິ່ງເຫຼົ່ານີ້ແລ້ວ, ໃນອະນາຄົດ ປະສົບການຂອງພວກເຂົາກໍຍິ່ງຈະເລິກເຊິ່ງຫຼາຍກວ່າເດີມ. ໃນປັດຈຸບັນ, ແນວຄິດ, ຈິນຕະນາການ ແລະ ການອອກນອກຮູ້ນອກທາງໃນການປະຕິບັດຂອງພວກເຈົ້າແມ່ນກຳລັງປີ້ນກັບ ແລະ ເສັ້ນທາງແຫ່ງການປະຕິບັດ ແລະ ການເຂົ້າສູ່ກຳລັງຖືກເປີດເຜີຍຕໍ່ພວກເຈົ້າ, ຫຼັງຈາກນັ້ນ ຂັ້ນຕອນຂອງພາລະກິດນີ້ຈະສິ້ນສຸດລົງ ແລະ ພວກເຈົ້າກໍຈະເລີ່ມຕົ້ນຍ່າງໃນເສັ້ນທາງທີ່ພວກເຈົ້າ ຜູ້ເຊິ່ງເປັນມະນຸດຄວນຍ່າງ. ຫຼັງຈາກນັ້ນ ພາລະກິດຂອງເຮົາກໍຈະຖືກເຮັດໃຫ້ສຳເລັດ ແລະຕັ້ງແຕ່ຈຸດນັ້ນເປັນຕົ້ນໄປ ພວກເຈົ້າກໍຈະບໍ່ພົບກັບເຮົາອີກຕໍ່ໄປ. ໃນປັດຈຸບັນ ວຸດທິພາວະຂອງພວກເຈົ້າແມ່ນຍັງຕໍ່າຫຼາຍ. ມີຄວາມຫຍຸ້ງຍາກຫຼາຍຢ່າງທີ່ເກີດຈາກທຳມະຊາດ ແລະ ແກ່ນແທ້ຂອງມະນຸດ ແລະ ດ້ວຍເຫດນັ້ນຈຶ່ງມີບາງສິ່ງທີ່ຝັງເລິກໂດຍທີ່ຍັງບໍ່ໄດ້ຂຸດຄົ້ນຂຶ້ນມາເທື່ອ. ພວກເຈົ້າບໍ່ເຂົ້າໃຈລາຍລະອຽດເລັກນ້ອຍຂອງທຳມະຊາດ ແລະ ແກ່ນແທ້ຂອງຜູ້ຄົນ ແລະ ຍັງຕ້ອງການໃຫ້ເຮົາບົ່ງຊີ້ສິ່ງເຫຼົ່ານັ້ນຢູ່, ບໍ່ດັ່ງນັ້ນ ພວກເຈົ້າກໍຈະບໍ່ສາມາດຮູ້ຈັກສິ່ງເຫຼົ່ານັ້ນໄດ້. ໃນຈຸດໃດໜຶ່ງ ເມື່ອສິ່ງຕ່າງໆທີ່ຢູ່ພາຍໃນກະດູກ ແລະ ເລືອດຂອງພວກເຈົ້າຖືກເປີດໂປງອອກ, ເຊິ່ງເປັນສິ່ງທີ່ຮູ້ຈັກກັນວ່າ ການຂ້ຽນຕີ ແລະ ການພິພາກສາ. ມີແຕ່ເມື່ອພາລະກິດຂອງເຮົາຖືກປະຕິບັດຢ່າງທົ່ວເຖິງ ແລະ ຄົບຖ້ວນເທົ່ານັ້ນເຮົາຈຶ່ງຈະສິ້ນສຸດພາລະກິດນັ້ນ. ຍິ່ງແກ່ນແທ້ໃນການເສື່ອມຊາມຂອງພວກເຈົ້າຖືກເປີດໂປງຫຼາຍສ່ຳໃດ, ພວກເຈົ້າກໍຈະມີຄວາມຮູ້ຫຼາຍຍິ່ງຂຶ້ນ ແລະ ສິ່ງນີ້ຈະມີຄວາມໝາຍທີ່ຍິ່ງໃຫຍ່ຕໍ່ຄຳພະຍານ

ແລະ ຄວາມສົມບູນຂອງພວກເຈົ້າໃນອະນາຄົດ. ມີແຕ່ເມື່ອພາລະກິດແຫ່ງການຂ້ຽນຕີ ແລະ ການພິພາກສາຖືກປະຕິບັດຢ່າງທົ່ວເຖິງ ພາລະກິດຂອງເຮົາຈຶ່ງຈະສຳເລັດ ແລະ ພວກເຈົ້າຈະຮູ້ຈັກເຮົາຈາກການຂ້ຽນຕີ ແລະ ການພິພາກສາຂອງເຮົາ. ບໍ່ແມ່ນແຕ່ພວກເຈົ້າຈະຮູ້ຈັກອຸປະນິໄສ ແລະ ຄວາມຊອບທຳຂອງເຮົາເທົ່ານັ້ນ, ແຕ່ທີ່ສຳຄັນໄປກວ່ານັ້ນ ພວກເຈົ້າຈະຮູ້ຈັກການຂ້ຽນຕີ ແລະ ການພິພາກສາຂອງເຮົາອີກດ້ວຍ. ຫຼາຍຄົນທ່າມກາງພວກເຈົ້າມີແນວຄິດທີ່ຍິ່ງໃຫຍ່ກ່ຽວກັບພາລະກິດໃໝ່ ແລະ ລະດັບລາຍລະອຽດຂອງພາລະກິດຂອງເຮົາ. ເຖິງຢ່າງໃດກໍຕາມ ພວກເຈົ້າຄວນເຫັນວ່າພາລະກິດຂອງເຮົາເປັນສິ່ງທີ່ໃໝ່ ແລະ ມີລາຍລະອຽດ ແລະ ເຮົາສັ່ງສອນພວກເຈົ້າໃຫ້ປະຕິບັດແບບໜ້າຕໍ່ໜ້າໂດຍຈັບມືພວກເຈົ້າປະຕິບັດເລີຍ. ມີພຽງແຕ່ເຮັດແບບນີ້ຈຶ່ງຈະເປັນປະໂຫຍດຕໍ່ການປະຕິບັດຂອງພວກເຈົ້າ ແລະ ຕໍ່ຄວາມສາມາດຂອງພວກເຈົ້າທີ່ຈະຍຶດໝັ້ນໃນອະນາຄົດ; ບໍ່ດັ່ງນັ້ນ ພວກເຈົ້າກໍຈະເປັນຄືກັບໃບໄມ້ໃນລະດູໃບໄມ້ຫຼົ່ນ ທີ່ແຫ່ວ, ເຫຼືອງ ແລະ ແຫ້ງ, ບໍ່ມີຄ່າແມ່ນແຕ່ໜ້ອຍດຽວ. ພວກເຈົ້າຄວນຮູ້ຈັກວ່າ ເຮົາຮູ້ທຸກສິ່ງທີ່ຢູ່ໃນຫົວໃຈ ແລະ ວິນຍານຂອງພວກເຈົ້າ; ແລ້ວພວກເຈົ້າຄວນຮູ້ວ່າພາລະກິດທີ່ເຮົາປະຕິບັດ ແລະ ພຣະທຳທີ່ເຮົາກ່າວແມ່ນມີຄວາມເລິກເຊິ່ງຫຼາຍ. ອີງຕາມອຸປະນິໄສ ແລະ ຄວາມສາມາດຂອງພວກເຈົ້າ, ນີ້ແມ່ນວິທີທີ່ພວກເຈົ້າຄວນຖືກຈັດການ. ມີພຽງແຕ່ໃນລັກສະນະນີ້ເທົ່ານັ້ນ ທີ່ຄວາມຮູ້ຂອງພວກເຈົ້າກ່ຽວກັບການຂ້ຽນຕີ ແລະ ການພິພາກສາຂອງເຮົາຈຶ່ງຈະຊັດເຈນຍິ່ງຂຶ້ນ ແລະ ເຖິງແມ່ນເຈົ້າບໍ່ຮູ້ໃນມື້ນີ້, ມື້ອື່ນເຈົ້າກໍຈະຮູ້. ທຸກສິ່ງທີ່ຖືກສ້າງຂຶ້ນແມ່ນຈະຕົກລົງທ່າມກາງພຣະທຳແຫ່ງການຂ້ຽນຕີ ແລະ ການພິພາກສາຂອງເຮົາ, ຍ້ອນເຮົາບໍ່ອົດທົນກັບການຕໍ່ຕ້ານຂອງບຸກຄົນໃດໜຶ່ງທີ່ມີຕໍ່ເຮົາ.

ພວກເຈົ້າທຸກຄົນຕ້ອງສາມາດຄວບຄຸມຊີວິດຂອງພວກເຈົ້າເອງຢ່າງມີເຫດຜົນ. ພວກເຈົ້າອາດຈັດການກັບແຕ່ລະມື້ຕາມທີ່ພວກເຈົ້າຕ້ອງການ; ພວກເຈົ້າມີອິດສະຫຼະທີ່ຈະເຮັດຫຍັງກໍຕາມທີ່ພວກເຈົ້າພໍໃຈ; ພວກເຈົ້າອາດອ່ານພຣະທຳຂອງພຣະເຈົ້າ, ຟັງເພງສັນລະເສີນ ຫຼື ຄຳເທດສະໜາ ຫຼື ຈົດບັນທຶກການສັນລະເສີນ; ແລະ ຖ້າພວກເຈົ້າສົນໃຈ, ພວກເຈົ້າອາດຂຽນເພງສັນລະເສີນ. ທຸກສິ່ງເຫຼົ່ານີ້ບໍ່ໄດ້ຖືວ່າເປັນຊີວິດທີ່ເໝາະສົມບໍ? ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນສິ່ງທີ່ຄວນປະກອບເຂົ້າໃນຊີວິດຂອງມະນຸດ. ຜູ້ຄົນຄວນດຳລົງຊີວິດຕາມທຳມະຊາດ; ມີພຽງເມື່ອພວກເຂົາໄດ້ເກັບກ່ຽວໝາກຜົນຈາກຄວາມເປັນມະນຸດທີ່ທຳມະດາຂອງພວກເຂົາ ແລະ ຈາກຊີວິດຝ່າຍວິນຍານຂອງພວກເຂົາ, ພວກເຂົາຈຶ່ງຈະຖືວ່າໄດ້ເຂົ້າສູ່ຊີວິດທີ່ປົກກະຕິ. ໃນປັດຈຸບັນ, ມັນບໍ່ໄດ້ແມ່ນແຕ່ຄວາມເປັນມະນຸດເທົ່ານັ້ນທີ່ເຈົ້າຂາດຄວາມເຂົ້າໃຈ ແລະ ເຫດຜົນ. ຍັງມີນິມິດອີກຫຼາຍຢ່າງທີ່ຄວນຮູ້ຈັກ ເຊິ່ງຜູ້ຄົນຕ້ອງປະກອບມີ ແລະ ບົດຮຽນຕ່າງໆທີ່ເຈົ້າພະເຊີນ, ນັ້ນແມ່ນບົດຮຽນທີ່ເຈົ້າຄວນຮຽນຮູ້; ເຈົ້າຕ້ອງສາມາດປັບໃຫ້ເຂົ້າກັບສະພາບແວດລ້ອມ. ການປັບປຸງລະດັບການສຶກສາຂອງເຈົ້າຕ້ອງຖືກດຳເນີນການໃນໄລຍະຍາວເພື່ອເຮັດໃຫ້ມັນເກີດໝາກຜົນ. ມີບາງສິ່ງທີ່ເຈົ້າຕ້ອງໄດ້ມີເພື່ອເຮັດໃຫ້ຊີວິດຂອງເຈົ້າປົກກະຕິ ແລະ ເຈົ້າຍັງຈະຕ້ອງໄດ້ເຂົ້າໃຈທາງເຂົ້າສູ່ຊີວິດຂອງເຈົ້າອີກດ້ວຍ. ໃນປັດຈຸບັນ, ເຈົ້າໄດ້ມາເຂົ້າໃຈພຣະທຳຫຼາຍຂໍ້ຂອງພຣະເຈົ້າ, ໃນຕອນນີ້ເຈົ້າໄດ້ອ່ານພຣະທຳເຫຼົ່ານັ້ນອີກຄັ້ງທີ່ເຈົ້າບໍ່ເຂົ້າໃຈໃນເວລານັ້ນ ແລະ

ຕອນນີ້ ຫົວໃຈຂອງເຈົ້າແມ່ນໝັ້ນຄົງຫຼາຍຂຶ້ນ. ສິ່ງເຫຼົ່ານີ້ຄືຜົນທີ່ເຈົ້າໄດ້ຮັບ. ມື້ໃດກໍຕາມທີ່ເຈົ້າກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ມີຄວາມເຂົ້າໃຈເລັກນ້ອຍພາຍໃນຕົວເຈົ້າ, ເຈົ້າຈະສາມາດສື່ສານກັບອ້າຍເອື້ອຍນ້ອງຂອງເຈົ້າໄດ້ຢ່າງອິດສະຫຼະ. ນີ້ບໍ່ແມ່ນຊີວິດທີ່ເຈົ້າຄວນມີບໍ? ບາງຄັ້ງກໍຈະມີຄຳຖາມບາງຂໍ້ ຫຼື ເຈົ້າໄດ້ໄຕ່ຕອງເບິ່ງບາງຂໍ້ຄວາມ ເຊິ່ງມັນເຮັດໃຫ້ເຈົ້າແຍກແຍະໄດ້ດີຂຶ້ນກວ່າເກົ່າ ແລະ ສ້າງຄວາມເຂົ້າໃຈ ແລະ ສະຕິປັນຍາໃຫ້ກັບເຈົ້າຫຼາຍຂຶ້ນ, ເຮັດໃຫ້ເຈົ້າເຂົ້າໃຈຄວາມຈິງບາງຢ່າງ ແລະ ສິ່ງນີ້ບໍ່ແມ່ນສິ່ງທີ່ມີຢູ່ໃນຊີວິດຝ່າຍວິນຍານທີ່ເວົ້າເຖິງໃນປັດຈຸບັນບໍ? ມັນບໍ່ສາມາດຍອມຮັບໄດ້ທີ່ຈະພຽງແຕ່ນຳເອົາດ້ານໃດໜຶ່ງຂອງຊີວິດຝ່າຍວິນຍານເຂົ້າສູ່ການປະຕິບັດ; ການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ການອະທິຖານ ແລະ ການຮ້ອງເພງສັນລະເສີນລ້ວນແລ້ວແຕ່ປະກອບເປັນຊີວິດຝ່າຍວິນຍານ ແລະ ເມື່ອເຈົ້າມີຊີວິດຝ່າຍວິນຍານ, ເຈົ້າກໍຕ້ອງມີຊີວິດຂອງຄວາມເປັນມະນຸດທີ່ປົກກະຕິອີກດ້ວຍ. ໃນປັດຈຸບັນ ຫຼາຍສິ່ງທີ່ຖືກເວົ້າເຖິງກໍແມ່ນເພື່ອໃຫ້ມີເຫດຜົນ ແລະ ຄວາມເຂົ້າໃຈກັບຜູ້ຄົນ, ເຮັດໃຫ້ພວກເຂົາມີຊີວິດຂອງຄວາມເປັນມະນຸດທີ່ປົກກະຕິ. ການຮູ້ຈັກຄວາມໝາຍຂອງການເຂົ້າໃຈ; ຄວາມໝາຍຂອງການມີມະນຸດສຳພັນທີ່ປົກກະຕິ; ວິທີທີ່ເຈົ້າຄວນມີປະຕິກິລິຍາກັບຜູ້ຄົນ, ທຸກສິ່ງເຫຼົ່ານີ້ ເຈົ້າຄວນປະກອບມີໂດຍຜ່ານທາງການກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລ້ວ ສິ່ງທີ່ຮຽກຮ້ອງຈາກເຈົ້າກໍສາມາດບັນລຸໄດ້ຜ່ານທາງຄວາມເປັນມະນຸດທີ່ປົກກະຕິ. ໃຫ້ປະກອບຕົນເອງດ້ວຍສິ່ງຕ່າງໆທີ່ເຈົ້າຄວນມີ ແລະ ຢ່າລື່ນສິ່ງທີ່ຖືກຕ້ອງ; ບາງຄົນໃຊ້ທຸກລັກສະນະຂອງຄຳເວົ້າ ແລະ ຄຳສັບ ແລະ ໃນສິ່ງນີ້ ພວກເຂົາກຳລັງໂອ້ອວດສະເໜ່ຂອງພວກເຂົາ. ແລ້ວມີບາງຄົນທີ່ອ່ານໜັງສືທຸກປະເພດດ້ວຍສິ່ງນັ້ນພວກເຂົາກໍໝົກມຸ້ນຢູ່ກັບຄວາມປາຖະໜາຂອງເນື້ອໜັງ. ພວກເຂົາຍິ່ງສຶກສາ ແລະ ລອກແບບຊີວະປະຫວັດ ແລະ ຄຳເວົ້າຂອງບຸກຄົນທີ່ຖືກເອີ້ນວ່າຍິ່ງໃຫຍ່ໃນໂລກ ແລະ ອ່ານໜັງສືໂປ້, ສິ່ງນີ້ຍິ່ງເປັນຕາຫົວ! ຄົນແບບນີ້ບໍ່ຮູ້ຈັກເສັ້ນທາງໃນການເຂົ້າສູ່ຊີວິດ, ແຮງໄກທີ່ພວກເຂົາຈະຮູ້ຈັກພາລະກິດຂອງພຣະເຈົ້າໃນປັດຈຸບັນ. ພວກເຂົາຍິ່ງບໍ່ຮູ້ຈັກວິທີການໃຊ້ເວລາແຕ່ລະມື້. ສິ່ງດັ່ງກ່າວເປັນແນວດູດລົມໃນຊີວິດຂອງພວກເຂົາ! ພວກເຂົາທັງໝົດບໍ່ສົນໃຈຕໍ່ສິ່ງທີ່ພວກເຂົາຄວນເຂົ້າສູ່. ທຸກສິ່ງທີ່ພວກເຂົາເຮັດກໍຄືການເວົ້າ ແລະ ສື່ສານກັບຄົນອື່ນ, ຄືກັບວ່າການເວົ້າເກັ່ງຄືຕົວແທນທາງເຂົ້າຂອງພວກເຂົາເອງ. ພວກເຂົາບໍ່ມີຄວາມອັບອາຍບໍ? ຄົນເຫຼົ່ານີ້ແມ່ນຄົນທີ່ບໍ່ຮູ້ຈັກວິທີການດຳລົງຊີວິດ ແລະ ບໍ່ເຂົ້າໃຈຊີວິດຂອງມະນຸດ; ພວກເຂົາໃຊ້ເວລາໝົດມື້ພຽງເພື່ອກິນ ແລະ ເຮັດສິ່ງຕ່າງໆທີ່ບໍ່ມີຄວາມໝາຍ, ແມ່ນຫຍັງຄືເປົ້າໝາຍຂອງການດຳລົງຊີວິດແບບນີ້? ເຮົາໄດ້ເຫັນວ່າ ສຳລັບຫຼາຍຄົນແລ້ວ, ນອກຈາກການເຮັດວຽກ, ການກິນ ແລະ ການນຸ່ງຫົ່ມ, ເວລາທີ່ມີຄ່າຂອງພວກເຂົາແມ່ນເຕັມໄປດ້ວຍສິ່ງທີ່ບໍ່ມີຄວາມໝາຍ, ບໍ່ວ່າມັນຈະເປັນການຫຼິ້ນມ່ວນຊື່ນ ແລະ ການເຮັດຫຼິ້ນໆ, ການນິນທາ ຫຼື ການນອນໝົດມື້. ສິ່ງນີ້ແມ່ນຊີວິດຂອງໄພ່ພົນບໍ? ສິ່ງນີ້ແມ່ນຊີວິດຂອງບຸກຄົນທີ່ປົກກະຕິບໍ? ຊີວິດດັ່ງກ່າວສາມາດເຮັດໃຫ້ເຈົ້າສົມບູນບໍ ເມື່ອມັນຕໍ່າຕ້ອຍ, ຫຼ້າຫຼັງ ແລະ ລ່າເລີງ? ເຈົ້າເຕັມໃຈທີ່ຈະສູນເສຍຕົນເອງໃຫ້ກັບຊາຕານໂດຍບໍ່ໄດ້ປະໂຫຍດຫຍັງເລີຍບໍ? ເມື່ອຊີວິດຂອງຜູ້ຄົນງ່າຍດາຍ ແລະ ບໍ່ມີການທົນທຸກໃນສະພາບແວດລ້ອມຂອງພວກເຂົາ, ພວກເຂົາຈຶ່ງບໍ່ສາມາດມີປະສົບການໄດ້. ໃນສະພາບ

ແວດລ້ອມທີ່ສະບາຍ, ມັນງ່າຍທີ່ຜູ້ຄົນຈະກາຍເປັນຄົນຊົ່ວຊ້າ, ແຕ່ໃນສະພາບແວດລ້ອມທີ່ຫຍຸ້ງຍາກຈະເຮັດໃຫ້ເຈົ້າອະທິຖານດ້ວຍຄວາມຮີບດ່ວນ ແລະ ເຮັດໃຫ້ເຈົ້າບໍ່ກ້າປະຖິ້ມພຣະເຈົ້າ. ຍິ່ງຊີວິດຂອງຜູ້ຄົນງ່າຍ ແລະ ມົນໝອງສໍ່າໃດ, ພວກເຂົາຍິ່ງຮູ້ສຶກວ່າບໍ່ມີເປົ້າໝາຍໃນການດໍາລົງຊີວິດ ແລະ ພວກເຂົາຍິ່ງຮູ້ສຶກວ່າ ພວກເຂົາຄວນຕາຍດີກວ່າ. ນີ້ແມ່ນຄວາມເສື່ອມຊາມຂອງເນື້ອໜັງມະນຸດ; ພວກເຂົາພຽງແຕ່ໄດ້ຮັບປະໂຫຍດ ຖ້າພວກເຂົາຖືກຜະເຊີນກັບການທົດລອງ.

ຂັ້ນຕອນນັ້ນຂອງພາລະກິດຂອງພຣະເຢຊູແມ່ນຖືກປະຕິບັດໃນຢູດາຍ ແລະ ກາລີເລ ແລະ ຊາວຕ່າງຊາດກໍບໍ່ຮູ້ເຖິງພາລະກິດນັ້ນ. ພາລະກິດທີ່ພຣະອົງປະຕິບັດແມ່ນເປັນຄວາມລັບສູງ ແລະ ບໍ່ມີຊົນຊາດໃດນອກຈາກອິດສະຣາເອນທີ່ຮູ້ຈັກເຖິງພາລະກິດນັ້ນ. ມີແຕ່ເມື່ອພຣະເຢຊູເຮັດໃຫ້ພາລະກິດຂອງພຣະອົງສໍາເລັດ ແລະ ມັນກໍ່ໃຫ້ເກີດສຽງຮ້ອງໂຮ່ ຜູ້ຄົນຈຶ່ງຮູ້ຈັກເຖິງພາລະກິດນັ້ນ ແລະ ໃນເວລານັ້ນ ພຣະອົງກໍຈາກໄປແລ້ວ. ພຣະເຢຊູໄດ້ມາເພື່ອປະຕິບັດໜຶ່ງຂັ້ນຕອນຂອງພາລະກິດ, ຮັບເອົາບາງຄົນ ແລະ ເຮັດໃຫ້ໜຶ່ງຂັ້ນຕອນຂອງພາລະກິດສໍາເລັດ. ໃນທຸກຂັ້ນຕອນພາລະກິດທີ່ພຣະເຈົ້າປະຕິບັດ, ມີຫຼາຍຄົນທີ່ຕິດຕາມພຣະອົງ. ຖ້າພາລະກິດນັ້ນພຽງຖືກປະຕິບັດໂດຍພຣະເຈົ້າເອງ, ມັນກໍຈະບໍ່ມີຄວາມໝາຍ; ຕ້ອງມີຜູ້ຄົນຕິດຕາມພຣະເຈົ້າ ຈົນພຣະອົງປະຕິບັດຂັ້ນຕອນນັ້ນຂອງພາລະກິດສໍາເລັດ. ມີແຕ່ເມື່ອພາລະກິດຂອງພຣະເຈົ້າເອງຖືກເຮັດໃຫ້ສໍາເລັດ ຜູ້ຄົນຈຶ່ງເລີ່ມປະຕິບັດພາລະກິດທີ່ພຣະເຈົ້າມອບໝາຍໃຫ້ ແລະ ມີພຽງແຕ່ເມື່ອນັ້ນ ພາລະກິດຂອງພຣະເຈົ້າຈຶ່ງຈະເລີ່ມແຜ່ຂະຫຍາຍ. ພຣະເຈົ້າພຽງແຕ່ປະຕິບັດພາລະກິດແຫ່ງການເລີ່ມຕົ້ນຍຸກໃໝ່; ພາລະກິດຂອງຜູ້ຄົນແມ່ນການສືບຕໍ່ພາລະກິດນັ້ນ. ສະນັ້ນ ພາລະກິດໃນປັດຈຸບັນຈຶ່ງເປັນພຽງຊົ່ວຄາວ; ຊີວິດຂອງເຮົາກັບມະນຸດກໍຈະເປັນພຽງຊົ່ວຄາວ. ເຮົາພຽງແຕ່ເຮັດໃຫ້ພາລະກິດຂອງເຮົາສໍາເລັດ ແລະ ໃຫ້ພວກເຈົ້າປະຕິບັດໜ້າທີ່ໆພວກເຈົ້າຄວນປະຕິບັດ, ເພື່ອວ່າພາລະກິດນີ້ ແລະ ຂ່າວປະເສີດນີ້ຈະສາມາດຂະຫຍາຍໄດ້ໄວເທົ່າທີ່ຈະໄວໄດ້ໃນທ່າມກາງຊາວຕ່າງຊາດ ແລະ ບັນດາຊົນຊາດອື່ນໆ, ພຽງເມື່ອນັ້ນ ພວກເຈົ້າຈຶ່ງຈະສາມາດປະຕິບັດໜ້າຂອງພວກເຈົ້າດັ່ງມະນຸດໄດ້. ເວລາໃນປັດຈຸບັນແມ່ນມີຄ່າທີ່ສຸດ. ຖ້າເຈົ້າບໍ່ສົນໃຈມັນ, ເຈົ້າກໍເປັນຄົນໂງ່; ຖ້າໃນສະພາບແວດລ້ອມແບບນີ້, ເຈົ້າກິນ ແລະ ດື່ມພຣະທໍາເຫຼົ່ານີ້ ແລະ ຜະເຊີນກັບພາລະກິດນີ້ ແລະ ເຈົ້າຍັງຂາດຄວາມເດັດດ່ຽວທີ່ຈະສະແຫວງຫາຄວາມຈິງ ແລະ ບໍ່ມີຄວາມສໍານຶກກ່ຽວກັບພາລະແມ່ນແຕ່ໜ້ອຍດຽວ, ແລ້ວອະນາຄົດຂອງເຈົ້າຈະເປັນແນວໃດ? ຄົນຄືເຈົ້າຈະບໍ່ສຸກສໍາລັບການກໍາຈັດບໍ?

# ຮັບໃຊ້ດັ່ງທີ່ຊາວອິດສະຣາເອນເຮັດ

ໃນປັດຈຸບັນນີ້ ຫຼາຍຄົນບໍ່ໃສ່ໃຈກັບບົດຮຽນທີ່ຄວນຮຽນຮູ້ໃນຂະນະທີ່ປະສານງານກັບຄົນອື່ນ. ເຮົາໄດ້ຄົ້ນພົບວ່າ ພວກເຈົ້າຫຼາຍຄົນບໍ່ສາມາດຮຽນຮູ້ບົດຮຽນໃດເລີຍໃນຂະນະທີ່ປະສານງານກັບຄົນອື່ນ; ພວກເຈົ້າສ່ວນໃຫຍ່ຍຶດຕິດກັບທັດສະນະຂອງພວກເຈົ້າເອງ. ເມື່ອປະຕິບັດພາລະກິດໃນຄຣິສຕະຈັກ, ເຈົ້າກໍເວົ້າສ່ວນຂອງເຈົ້າ ແລະ ຄົນອື່ນກໍເວົ້າສ່ວນຂອງພວກເຂົາ ແລະ ຜູ້ທີ່ບໍ່ໄດ້ມີການພົວພັນກັບຄົນອື່ນ; ເຈົ້າກໍບໍ່ຮ່ວມມືນຳເລີຍ. ພວກເຈົ້າໝົກມຸ້ນກັບການສື່ສານເຖິງຄວາມເຂົ້າໃຈຂອງພວກເຈົ້າເອງເທົ່ານັ້ນ, ໝົກມຸ້ນກັບການປົດປ່ອຍ "ພາລະ" ທີ່ຢູ່ພາຍໃນພວກເຈົ້າໂດຍບໍ່ສະແຫວງຫາຊີວິດແມ່ນແຕ່ນ້ອຍເລີຍ. ເບິ່ງຄືກັບວ່າ ເຈົ້າພຽງແຕ່ເຮັດພາລະກິດພໍເປັນພິທີ, ໂດຍເຊື່ອຢູ່ສະເໝີວ່າເຈົ້າຄວນປະຕິບັດຕາມວິທີຂອງເຈົ້າເອງ ບໍ່ສົນໃຈວ່າຄົນອື່ນຈະເວົ້າຫຍັງ ຫຼື ເຮັດຫຍັງກໍຕາມ; ເຈົ້າຄິດວ່າເຈົ້າຄວນສົນທະນາຕາມທີ່ພຣະວິນຍານບໍລິສຸດນຳພາເຈົ້າ ໂດຍບໍ່ຄຳນຶງເຖິງວ່າສະຖານະພາບຂອງຄົນອື່ນຈະເປັນແນວໃດ. ພວກເຈົ້າບໍ່ສາມາດຄົ້ນພົບຄວາມເຂັ້ມແຂງຂອງຄົນອື່ນໄດ້ ແລະ ບໍ່ສາມາດກວດສອບຕົນເອງໄດ້. ການທີ່ພວກເຈົ້າຮັບເອົາສິ່ງຕ່າງໆແມ່ນບ່ຽງເບນ ແລະ ຜິດພາດແທ້ໆ. ມັນສາມາດເວົ້າໄດ້ວ່າ ແມ່ນແຕ່ໃນປັດຈຸບັນ ພວກເຈົ້າກໍຍັງສະແດງຄວາມຄິດທີ່ວ່າຕົນເອງຊອບທຳຫຼາຍ ຄືກັບວ່າຄວາມເຈັບໄຂ້ໄດ້ກັບຄືນສູ່ສະພາບເດີມ. ພວກເຈົ້າບໍ່ສື່ສານກັນໃນທາງທີ່ຈະບັນລຸຄວາມເປີດເຜີຍຢ່າງສົມບູນ, ຍົກຕົວຢ່າງ: ພວກເຈົ້າໄດ້ບັນລຸຜົນຈາກພາລະກິດຫຍັງແດ່ໃນຄຣິສຕະຈັກໃດໜຶ່ງ ຫຼື ກ່ຽວກັບສະພາວະພາຍໃນຕົວພວກເຈົ້າໃນປັດຈຸບັນ ແລະ ອື່ນໆ; ພວກເຈົ້າບໍ່ເຄີຍສື່ສານກ່ຽວກັບສິ່ງນີ້ເລີຍ. ແທ້ຈິງແລ້ວ ພວກເຈົ້າບໍ່ມີການປະຕິບັດໃນການລົ້ມເລີກແນວຄິດຂອງພວກເຈົ້າ ຫຼື ປ່ອຍວາງຕົນເອງ. ຜູ້ນຳ ແລະ ຜູ້ປະຕິບັດພາລະກິດພຽງແຕ່ຄິດເຖິງວິທີທີ່ຈະຮັກສາອ້າຍເອື້ອຍນ້ອງບໍ່ໃຫ້ເຮັດໃນສິ່ງທີ່ເປັນລົບ ແລະ ວິທີທີ່ຈະເຮັດໃຫ້ພວກເຂົາສາມາດຕິດຕາມຢ່າງຕັ້ງໜ້າ. ຢ່າງໃດກໍຕາມ, ພວກເຈົ້າທຸກຄົນຄິດວ່າພຽງຕິດຕາມຢ່າງຕັ້ງໜ້າກໍພຽງພໍ ແລະ ໂດຍພື້ນຖານແລ້ວ ພວກເຈົ້າບໍ່ເຂົ້າໃຈວ່າ ການຮູ້ຈັກຕົນເອງ ແລະ ການປ່ອຍວາງຕົນເອງໝາຍເຖິງຫຍັງ, ແຮງໄກທີ່ພວກເຈົ້າຈະເຂົ້າໃຈວ່າການຮັບໃຊ້ແບບຮ່ວມມືກັບຄົນອື່ນໝາຍເຖິງຫຍັງ. ພວກເຈົ້າພຽງແຕ່ຄິດກ່ຽວກັບຄວາມປະສົງຂອງຕົນເອງເພື່ອຕອບແທນຄວາມຮັກຂອງພຣະເຈົ້າ, ກ່ຽວກັບຄວາມປະສົງຂອງຕົນເອງເພື່ອດຳລົງຊີວິດຕາມຮູບແບບຂອງເປໂຕ. ນອກຈາກສິ່ງເຫຼົ່ານີ້ແລ້ວ ເຈົ້າບໍ່ໄດ້ຄິດກ່ຽວກັບສິ່ງອື່ນເລີຍ. ເຈົ້າເຖິງກັບເວົ້າວ່າ ບໍ່ວ່າຄົນອື່ນຈະເຮັດຫຍັງກໍຕາມ, ເຈົ້າກໍຈະບໍ່ຍອມເຮັດຕາມຢ່າງຫຼັບຫູຫຼັບຕາ ແລະ ບໍ່ວ່າຄົນອື່ນຈະເປັນແບບໃດກໍຕາມ, ເຈົ້າເອງກໍຈະສະແຫວງຫາຄວາມສົມບູນຈາກພຣະເຈົ້າ ແລະ ນັ້ນກໍຈະພຽງພໍແລ້ວ. ຢ່າງໃດກໍຕາມ, ຄວາມຈິງກໍຄື ຄວາມປະສົງຂອງເຈົ້າໃນຄວາມເປັນຈິງແມ່ນບໍ່ມີການສະແດງອອກຢ່າງເປັນຮູບປະທຳໃດໆ. ສິ່ງທັງໝົດນີ້ບໍ່ແມ່ນຄວາມປະພຶດທີ່ພວກເຈົ້າສະແດງອອກໃນປັດຈຸບັນນີ້ບໍ? ພວກເຈົ້າແຕ່ລະຄົນເຊື່ອໝັ້ນໃນຄວາມເຂົ້າໃຈຂອງພວກເຈົ້າເອງ ແລະ ພວກເຈົ້າທຸກຄົນກໍປາດຖະໜາທີ່ຈະຖືກເຮັດໃຫ້ສົມບູນ. ເຮົາເຫັນວ່າ ພວກເຈົ້າໄດ້ຮັບໃຊ້ເປັນເວລາດົນນານໂດຍບໍ່ມີ

ການກ້າວໜ້າພໍເທົ່າໃດເລີຍ; ໂດຍສະເພາະໃນບົດຮຽນນີ້ທີ່ກ່ຽວກັບການເຮັດວຽກຮ່ວມກັນຢ່າງສາມັກຄີ, ພວກເຈົ້າບໍ່ໄດ້ບັນລຸຫຍັງເລີຍ! ເມື່ອໄປຄຣິສຕະຈັກ ເຈົ້າກໍສື່ສານໃນວິທີຂອງເຈົ້າ ແລະ ຄົນອື່ນກໍສົນທະນາໃນວິທີຂອງພວກເຂົາ. ຫາຍາກທີ່ຈະມີການຮ່ວມມືກັນຢ່າງສາມັກຄີ ແລະ ນີ້ຍິ່ງເປັນຄວາມຈິງສຳລັບຜູ້ຕິດຕາມທີ່ມີຕຳແໜ່ງຕໍ່າກວ່າເຈົ້າ. ໝາຍຄວາມວ່າ ຍາກທີ່ຈະມີຜູ້ຄົນທ່າມກາງພວກເຈົ້າເຂົ້າໃຈຄວາມໝາຍຂອງການຮັບໃຊ້ພຣະເຈົ້າ ຫຼື ວິທີທີ່ຄົນໃດໜຶ່ງຄວນຮັບໃຊ້ພຣະເຈົ້າ. ພວກເຈົ້າສັບສົນ ແລະ ຖືວ່າບົດຮຽນແບບນີ້ເປັນເລື່ອງບໍ່ສຳຄັນ. ຍັງມີຫຼາຍຄົນທີ່ບໍ່ພຽງແຕ່ຈະບໍ່ປະຕິບັດຄວາມຈິງໃນລັກສະນະນີ້, ແຕ່ ພວກເຂົາຍັງເຮັດຜິດໂດຍຕັ້ງໃຈອີກດ້ວຍ. ແມ່ນແຕ່ຄົນທີ່ຮັບໃຊ້ເປັນເວລາຫຼາຍປີກໍຍັງຕໍ່ສູ້ ແລະ ເຮັດກົນອຸບາຍໃສ່ກັນ, ອິດສາ ແລະ ແຂ່ງຂັນກັນ; ທຸກຄົນແມ່ນຄິດເຫັນແຕ່ຕົນເອງ ແລະ ພວກເຂົາບໍ່ຮ່ວມມືກັນເລີຍ. ທຸກສິ່ງເຫຼົ່ານີ້ບໍ່ໄດ້ສະແດງເຖິງວຸດທິພາວະແທ້ຈິງຂອງພວກເຈົ້າບໍ? ພວກເຈົ້າທຸກຄົນຮັບໃຊ້ຮ່ວມກັນໃນແຕ່ລະມື້ ຄືກັນກັບຊາວອິດສະຣາເອນທີ່ຮັບໃຊ້ພຣະເຈົ້າເອງໃນພຣະວິຫານໂດຍກົງທຸກມື້. ເປັນໄປໄດ້ແນວໃດທີ່ພວກເຈົ້າທຸກຄົນທີ່ຮັບໃຊ້ພຣະເຈົ້າ ບໍ່ຮູ້ຈັກວິທີການຮ່ວມມື ແລະ ວິທີການຮັບໃຊ້?

ໃນເວລານັ້ນ, ຊາວອິດສະຣາເອນຮັບໃຊ້ພຣະເຢໂຮວາໃນພຣະວິຫານໂດຍກົງ ແລະ ພວກເຂົາມີຖານະເປັນປະໂລຫິດ. (ແນ່ນອນ ບໍ່ແມ່ນທຸກຄົນເປັນປະໂລຫິດ; ມີພຽງແຕ່ບາງຄົນທີ່ຮັບໃຊ້ພຣະເຢໂຮວາໃນພຣະວິຫານເທົ່ານັ້ນທີ່ເປັນປະໂລຫິດ). ພວກເຂົາຈະໃສ່ມົງກຸດທີ່ພຣະເຢໂຮວາປະທານໃຫ້ກັບພວກເຂົາ (ໝາຍຄວາມວ່າ ພວກເຂົາເຮັດມົງກຸດຕາມເງື່ອນໄຂຂອງພຣະເຢໂຮວາ; ບໍ່ແມ່ນວ່າພຣະເຢໂຮວາມອບມົງກຸດໃຫ້ພວກເຂົາໂດຍກົງ). ພວກເຂົາຍັງນຸ່ງເສື້ອຄຸມຂອງປະໂລຫິດທີ່ພຣະເຢໂຮວາປະທານໃຫ້ກັບພວກເຂົາ ແລະ ຮັບໃຊ້ພຣະອົງໂດຍຕີນເປົ່າໃນພຣະວິຫານໂດຍກົງຕັ້ງແຕ່ເຊົ້າຈົນຄໍ່າ. ການຮັບໃຊ້ຂອງພວກເຂົາທີ່ມີຕໍ່ພຣະເຢໂຮວາບໍ່ແມ່ນຕາມອຳເພີໃຈ ແລະ ມັນບໍ່ແມ່ນການແລ່ນໄປມາແບບຕາບອດ; ກົງກັນຂ້າມ ມັນລ້ວນແລ້ວແຕ່ສອດຄ່ອງກັບກົດລະບຽບ ທີ່ບໍ່ມີໃຜທີ່ຮັບໃຊ້ພຣະເຢໂຮວາໂດຍກົງ ສາມາດລະເມີດໄດ້. ພວກເຂົາທຸກຄົນຕ້ອງປະຕິບັດຕາມກົດລະບຽບເຫຼົ່ານີ້; ບໍ່ດັ່ງນັ້ນ, ພວກເຂົາກໍຈະຖືກເກືອດຫ້າມບໍ່ໃຫ້ເຂົ້າສູ່ພຣະວິຫານ. ຖ້າຄົນໃດເຮັດຜິດຕໍ່ກົດລະບຽບຂອງພຣະວິຫານ ນັ້ນກໍຄື ຖ້າຄົນໃດກໍຕາມບໍ່ເຊື່ອຟັງຄຳສັ່ງຂອງພຣະເຢໂຮວາ ຄົນນັ້ນກໍຕ້ອງຖືກລົງໂທດຕາມກົດບັນຍັດທີ່ພຣະເຢໂຮວາໄດ້ກຳນົດໄວ້ ແລະ ບໍ່ມີໃຜໄດ້ຮັບອະນຸຍາດໃຫ້ຄັດຄ້ານສິ່ງນີ້ ຫຼື ປົກປ້ອງຜູ້ທີ່ກະທຳຜິດ. ບໍ່ວ່າພວກເຂົາໄດ້ຮັບໃຊ້ພຣະເຈົ້າເປັນເວລາເທົ່າໃດປີກໍຕາມ, ທຸກຄົນຕ້ອງປະຕິບັດຕາມກົດລະບຽບ. ຍ້ອນເຫດຜົນນີ້ ປະໂລຫິດຫຼາຍຄົນຈຶ່ງລ້ວນແລ້ວແຕ່ນຸ່ງເສື້ອຄຸມຂອງປະໂລຫິດ ແລະ ຮັບໃຊ້ພຣະເຢໂຮວາໃນລັກສະນະນີ້ຕະຫຼອດທັງປີ ເຖິງແມ່ນພຣະອົງຈະບໍ່ໄດ້ປະຕິບັດຕໍ່ພວກເຂົາຢ່າງພິເສດໃດໆກໍຕາມ. ພວກເຂົາເຖິງກັບໃຊ້ທັງຊີວິດຂອງພວກເຂົາຢູ່ຕໍ່ໜ້າແທ່ນບູຊາ ແລະ ໃນພຣະວິຫານ. ນີ້ແມ່ນການສະແດງເຖິງຄວາມຈົງຮັກພັກດີຂອງພວກເຂົາ ແລະ ຄວາມອ່ອນນ້ອມຂອງພວກເຂົາ. ມັນບໍ່ແປກໃຈເລີຍທີ່ພຣະເຢໂຮວາປະທານພອນໃຫ້ພວກເຂົາແບບນີ້; ມັນເປັນຍ້ອນຄວາມຈົງຮັກພັກດີຂອງພວກເຂົາທີ່ພວກເຂົາໄດ້ຮັບຄວາມນິຍົມຊົມຊອບ ແລະ ເຫັນການກະທຳ

ທຸກຢ່າງຂອງພຣະເຢໂຮວາ. ໃນເວລານັ້ນ ເມື່ອພຣະເຢໂຮວາປະຕິບັດພາລະກິດໃນອິດສະຣາເອນ ທ່າມກາງຄົນທີ່ພຣະອົງເລືອກ, ພຣະອົງຮຽກຮ້ອງຕໍ່ພວກເຂົາຢ່າງໜັກຫຼາຍ. ພວກເຂົາທຸກຄົນເຊື່ອຟັງຫຼາຍ ແລະ ຖືກບັງຄັບໂດຍກົດບັນຍັດ; ກົດບັນຍັດເຫຼົ່ານັ້ນເຮັດໜ້າທີ່ບັງຄັບພວກເຂົາໃຫ້ຢຳເກງພຣະເຢໂຮວາ. ທຸກສິ່ງເຫຼົ່ານີ້ແມ່ນກົດບັນຍັດແຫ່ງການບໍລິຫານຂອງພຣະເຢໂຮວາ. ຖ້າປະໂລຫິດຄົນໃດບໍ່ຮັກສາວັນຊະບາໂຕ ຫຼື ລະເມີດພຣະບັນຍັດຂອງພຣະເຢໂຮວາ ແລະ ຖ້າພວກເຂົາຖືກຄົ້ນພົບໂດຍຄົນທຳມະດາ, ບຸກຄົນນັ້ນກໍຈະຖືກນຳມາຢູ່ຕໍ່ໜ້າແທ່ນບູຊາທັນທີ ແລະ ຖືກແກວ່ງກ້ອນຫີນໃສ່ຈົນຕາຍ. ແລ້ວບໍ່ມີການອະນຸຍາດໃຫ້ວາງສົບເຫຼົ່ານັ້ນໄວ້ໃນພຣະວິຫານ ຫຼື ອ້ອມຂ້າງພຣະວິຫານ; ພຣະເຢໂຮວາບໍ່ອະນຸຍາດສິ່ງນັ້ນ. ຖ້າຄົນໃດເຮັດແບບນັ້ນ, ພວກເຂົາກໍຈະຖືວ່າເປັນຄົນຖວາຍ "ເຄື່ອງບູຊາແບບໝິ່ນປະໝາດ" ແລະ ຖືກໂຍນລົງສູ່ຂຸມເລິກ ແລະ ຂ້າໃຫ້ຕາຍ. ແນ່ນອນ, ທຸກຄົນດັ່ງກ່າວກໍຈະສູນເສຍຊີວິດຂອງພວກເຂົາ; ຈະບໍ່ມີໃຜມີຊີວິດລອດ. ຍັງມີຜູ້ຄົນທີ່ຖວາຍ "ໄຟແຫ່ງຄວາມໝິ່ນປະໝາດ" ເວົ້າອີກຢ່າງໜຶ່ງກໍຄື ຄົນທີ່ບໍ່ຖວາຍບູຊາໃນມື້ທີ່ພຣະເຢໂຮວາຈັດສັນໃຫ້ ກໍຈະຖືກເຜົາໄໝ້ດ້ວຍໄຟຂອງພຣະອົງໄປພ້ອມກັບເຄື່ອງບູຊາຂອງພວກເຂົາ ເຊິ່ງຈະບໍ່ອະນຸຍາດໃຫ້ມີຢູ່ເທິງແທ່ນບູຊາ. ເງື່ອນໄຂຂອງປະໂລຫິດກໍຄື: ພວກເຂົາບໍ່ອະນຸຍາດໃຫ້ເຂົ້າໃນພຣະວິຫານ ຫຼື ແມ່ນແຕ່ຢູ່ເດີ່ນດ້ານນອກຂອງພຣະວິຫານ ໂດຍບໍ່ລ້າງຕີນຂອງພວກເຂົາກ່ອນ; ພວກເຂົາບໍ່ສາມາດເຂົ້າສູ່ພຣະວິຫານ ຖ້າບໍ່ໄດ້ນຸ່ງເສື້ອຄຸມຂອງປະໂລຫິດ; ພວກເຂົາບໍ່ສາມາດເຂົ້າສູ່ພຣະວິຫານ ຖ້າບໍ່ໄດ້ໃສ່ມົງກຸດຂອງປະໂລຫິດ; ພວກເຂົາບໍ່ສາມາດເຂົ້າສູ່ພຣະວິຫານ ຖ້າເປິເປື້ອນດ້ວຍສົບຄົນຕາຍ; ພວກເຂົາບໍ່ສາມາດເຂົ້າສູ່ພຣະວິຫານຫຼັງຈາກທີ່ຈັບມືຂອງບຸກຄົນທີ່ບໍ່ຊອບທຳ ນອກຈາກວ່າຈະໄດ້ລ້າງມືຂອງຕົນເອງແລ້ວ; ແລະ ພວກເຂົາບໍ່ສາມາດເຂົ້າສູ່ພຣະວິຫານຫຼັງຈາກທີ່ເຮັດໃຫ້ຕົນເອງເປິເປື້ອນຢູ່ກັບແມ່ຍິງ (ນີ້ບໍ່ແມ່ນຕະຫຼອດໄປ, ພຽງແຕ່ສຳລັບສາມເດືອນ) ຫຼື ພວກເຂົາໄດ້ຮັບອະນຸຍາດໃຫ້ເຫັນໜ້າຂອງພຣະເຢໂຮວາ, ເມື່ອຄົບເວລາ ເຊິ່ງໝາຍຄວາມວ່າ ຫຼັງຈາກສາມເດືອນເທົ່ານັ້ນ ພວກເຂົາຈຶ່ງຈະໄດ້ຮັບອະນຸຍາດໃຫ້ນຸ່ງເສື້ອຄຸມຂອງປະໂລຫິດທີ່ສະອາດ ແລະ ຮັບໃຊ້ໃນເດີ່ນດ້ານນອກເປັນເວລາເຈັດມື້ກ່ອນທີ່ຈະສາມາດເຂົ້າສູ່ພຣະວິຫານເພື່ອເຫັນໜ້າພຣະເຢໂຮວາ. ພວກເຂົາໄດ້ຮັບອະນຸຍາດໃຫ້ນຸ່ງເສື້ອຄຸມປະໂລຫິດພາຍໃນພຣະວິຫານເທົ່ານັ້ນ ແລະ ບໍ່ໄດ້ຮັບອະນຸຍາດໃຫ້ນຸ່ງຢູ່ນອກພຣະວິຫານ ເພື່ອຫຼີກເວັ້ນຈາກການເຮັດໃຫ້ພຣະວິຫານຂອງພຣະເຢໂຮວາເປິເປື້ອນ; ທຸກຄົນທີ່ເປັນປະໂລຫິດຕ້ອງນຳເອົາຜູ້ທີ່ເຮັດຜິດຕໍ່ກົດບັນຍັດຂອງພຣະເຢໂຮວາມາຢູ່ຕໍ່ໜ້າແທ່ນບູຊາຂອງພຣະອົງ ເຊິ່ງເປັນບ່ອນທີ່ພວກເຂົາຈະຖືກຂ້າໃຫ້ຕາຍໂດຍຄົນທຳມະດາ; ບໍ່ດັ່ງນັ້ນ ໄຟກໍຈະເຜົາໄໝ້ປະໂລຫິດທີ່ໄດ້ພະຍານການກໍ່ອາຊະຍາກຳ. ດ້ວຍເຫດນັ້ນ ພວກເຂົາຈຶ່ງຈົງຮັກພັກດີຕໍ່ພຣະເຢໂຮວາຢ່າງບໍ່ສິ້ນສຸດ ເພາະກົດບັນຍັດຂອງພຣະອົງເຄັ່ງຄັດກັບພວກເຂົາຫຼາຍ ແລະ ພວກເຂົາກໍບໍ່ກ້າລະເມີດກົດບັນຍັດແຫ່ງການບໍລິຫານຂອງພຣະອົງໄດ້ຢ່າງຕາມໃຈ. ຊາວອິດສະຣາເອນຊື່ສັດຕໍ່ພຣະເຢໂຮວາ ເພາະພວກເຂົາໄດ້ເຫັນໄຟຂອງພຣະອົງ ແລະ ໄດ້ເຫັນມືທີ່ພຣະອົງຂ້ຽນຕີຜູ້ຄົນ ແລະ ພ້ອມນັ້ນ ຍ້ອນພວກເຂົາເຄົາລົບບູຊາພຣະເຢໂຮວາໃນຫົວໃຈຂອງພວກເຂົາມາແຕ່ທຳອິດ. ສະນັ້ນ ສິ່ງທີ່ພວກເຂົາໄດ້ຮັບບໍ່ແມ່ນພຽງແຕ່ໄຟຂອງພຣະເຢໂຮວາເທົ່ານັ້ນ,

ແຕ່ພວກເຂົາຍັງໄດ້ຮັບການດູແລ, ການປົກປ້ອງ ແລະ ພອນຈາກພຣະອົງອີກດ້ວຍ. ຄວາມຊື່ສັດຂອງພວກເຂົາກໍຄືສິ່ງທີ່ພວກເຂົາປະຕິບັດຕາມພຣະທຳຂອງພຣະເຢໂຮວາໃນທຸກສິ່ງທີ່ພວກເຂົາເຮັດ ແລະ ບໍ່ມີໃຜເລີຍທີ່ບໍ່ເຊື່ອຟັງ. ຖ້າມີບາງຄົນບໍ່ເຊື່ອຟັງ, ຄົນອື່ນໆກໍຈະປະຕິບັດຕາມພຣະທຳຂອງພຣະເຢໂຮວາໂດຍຂ້າຄົນທີ່ຕໍ່ຕ້ານພຣະເຢໂຮວາ ແລະ ຈະບໍ່ປົກປິດບຸກຄົນນັ້ນຈາກພຣະອົງເລີຍ. ຄົນທີ່ລະເມີດວັນຊະບາໂຕ, ຄົນທີ່ເຮັດຜິດຍ້ອນກິເລດຕັນຫາ ແລະ ຄົນທີ່ລັກເຄື່ອງຖວາຍບູຊາຂອງພຣະເຢໂຮວາຈະຖືກລົງໂທດຢ່າງຮຸນແຮງໂດຍສະເພາະ. ຄົນທີ່ລະເມີດວັນຊະບາໂຕຈະຖືກພວກເຂົາ (ຄົນທຳມະດາສາມັນ) ແກວ່ງກ້ອນຫີນໃສ່ຈົນຕາຍ ຫຼື ພວກເຂົາຈະຖືກຂ້ຽນຈົນຕາຍ ໂດຍບໍ່ມີຂໍ້ຍົກເວັ້ນໃດໆ. ຄົນທີ່ເຮັດຜິດຕໍ່ສິນທຳ, ແມ່ນແຕ່ຄົນທີ່ປາດຖະໜາຢາກໄດ້ຜູ້ຍິງທີ່ສວຍງາມ ຫຼື ຄົນທີ່ເກີດມີຄວາມຄິດບ້າກາມເມື່ອເຫັນແມ່ຍິງທີ່ຊົ່ວຊ້າ ຫຼື ຄົນທີ່ມີຕັນຫາເມື່ອໄດ້ເຫັນຍິງສາວ, ຄົນປະເພດນີ້ຈະຖືກຂ້າຕາຍ. ຖ້າມີຍິງສາວຄົນໃດທີ່ບໍ່ນຸ່ງເຄື່ອງປົກປິດ ຫຼື ໃສ່ຜ້າຄຸມໜ້າ ລໍ້ລວງຜູ້ຊາຍສູ່ການກະທຳຜິດກົດລະບຽບ, ຍິງສາວຄົນນັ້ນກໍຈະຖືກຂ້າຕາຍ. ຖ້າແມ່ນປະໂລຫິດ (ບຸກຄົນທີ່ຮັບໃຊ້ໃນພຣະວິຫານ) ທີ່ລະເມີດກົດລະບຽບປະເພດນີ້, ພວກເຂົາກໍຈະຖືກຄຶງໃສ່ໄມ້ກາງແຂນ ຫຼື ຖືກແຂວນຄໍເຊັ່ນກັນ. ບໍ່ມີບຸກຄົນດັ່ງກ່າວຖືກອະນຸຍາດໃຫ້ດຳລົງຊີວິດຢູ່ ແລະ ບໍ່ມີແມ່ນແຕ່ຄົນດຽວທີ່ຈະໄດ້ຮັບຄວາມພໍໃຈຕໍ່ໜ້າພຣະເຢໂຮວາ. ຍາດຕິພີ່ນ້ອງຂອງຄົນປະເພດນີ້ຈະບໍ່ໄດ້ຮັບອະນຸຍາດໃຫ້ຖວາຍເຄື່ອງບູຊາແກ່ພຣະເຢໂຮວາຕໍ່ໜ້າແທ່ນບູຊາເປັນເວລາສາມປີຫຼັງຈາກທີ່ເຂົາໄດ້ຕາຍໄປ ແລະ ພວກເຂົາຈະບໍ່ໄດ້ຮັບອະນຸຍາດໃຫ້ແບ່ງປັນເຄື່ອງບູຊາທີ່ພຣະເຢໂຮວາປະທານໃຫ້ກັບຄົນທົ່ວໄປ. ເມື່ອຄົບກຳນົດເວລາເທົ່ານັ້ນ ພວກເຂົາຈຶ່ງຈະສາມາດວາງງົວ ຫຼື ແກະຊັ້ນດີເທິງແທ່ນບູຊາຂອງພຣະເຢໂຮວາ. ຖ້າມີການຝ່າຝືນອື່ນໆ, ພວກເຂົາກໍຕ້ອງໄດ້ອົດອາຫານເປັນເວລາສາມມື້ຕໍ່ໜ້າພຣະເຢໂຮວາ ເພື່ອອ້ອນວອນຂໍຄວາມກະລຸນາຈາກພຣະອົງ. ການທີ່ພວກເຂົານະມັດສະການພຣະເຢໂຮວາບໍ່ແມ່ນຍ້ອນກົດບັນຍັດຂອງພຣະເຢໂຮວາເຂັ້ມງວດຫຼາຍ ແລະ ເຄັ່ງຄັດຫຼາຍເທົ່ານັ້ນ; ແຕ່ພວກເຂົານະມັດສະການພຣະອົງກໍຍ້ອນຄວາມກະລຸນາຂອງພຣະອົງ ແລະ ຍ້ອນພວກເຂົາຊື່ສັດຕໍ່ພຣະອົງ. ດ້ວຍເຫດນັ້ນ, ພວກເຂົາຈຶ່ງໄດ້ຊື່ສັດໃນການຮັບໃຊ້ຂອງພວກເຂົາຈົນມາຮອດປັດຈຸບັນ ແລະ ພວກເຂົາບໍ່ເຄີຍກັບຄຳອ້ອນວອນຂອງພວກເຂົາຕໍ່ໜ້າພຣະເຢໂຮວາ. ໃນປັດຈຸບັນ ປະຊາຊົນອິດສະຣາເອນຍັງໄດ້ຮັບການດູແລ ແລະ ການປົກປ້ອງຈາກພຣະເຢໂຮວາ ແລະ ພຣະອົງຍັງເປັນຄວາມກະລຸນາທ່າມກາງພວກເຂົາ ແລະ ອາໄສຢູ່ກັບພວກເຂົາສະເໝີ. ພວກເຂົາລ້ວນແລ້ວແຕ່ຮູ້ຈັກວິທີທີ່ພວກເຂົາຄວນເຄົາລົບບູຊາພຣະເຢໂຮວາ ແລະ ວິທີທີ່ພວກເຂົາຄວນຮັບໃຊ້ພຣະອົງ ແລະ ພວກເຂົາລ້ວນແລ້ວແຕ່ຮູ້ຈັກວິທີທີ່ພວກເຂົາຕ້ອງປະຕິບັດເພື່ອຮັບເອົາການດູແລ ແລະ ການປົກປ້ອງຈາກພຣະອົງ; ນີ້ກໍຍ້ອນວ່າພວກເຂົາລ້ວນແລ້ວແຕ່ເຄົາລົບບູຊາພຣະເຢໂຮວາໃນຫົວໃຈຂອງພວກເຂົາ. ຄວາມລັບສູ່ຄວາມສຳເລັດຂອງການຮັບໃຊ້ທັງໝົດຂອງພວກເຂົາບໍ່ມີຫຍັງນອກຈາກການເຄົາລົບບູຊາ. ດັ່ງນັ້ນ ພວກເຈົ້າແມ່ນເປັນແນວໃດໃນປັດຈຸບັນ? ພວກເຈົ້າມີຫຍັງທີ່ຄ້າຍຄືກັບຊາວອິດສະຣາເອນບໍ? ເຈົ້າຄິດວ່າ ການຮັບໃຊ້ໃນປັດຈຸບັນນີ້ຄືກັນກັບການປະຕິບັດຕາມການຊີ້ນຳຂອງບຸກຄົນທີ່ຍິ່ງໃຫຍ່ທາງຝ່າຍວິນຍານບໍ? ພວກເຈົ້າບໍ່ມີຄວາມຊື່ສັດ

ແລະ ຄວາມເຄົາລົບນັບຖືເລີຍ. ພວກເຈົ້າໄດ້ຮັບຄວາມກະລຸນາຢ່າງຫຼວງຫຼາຍ ແລະ ພວກເຈົ້າກໍທຽບເທົ່າກັບປະໂລຫິດຂອງຊາວອິດສະຣາເອນ ເພາະພວກເຈົ້າລ້ວນແລ້ວແຕ່ຮັບໃຊ້ພຣະເຈົ້າໂດຍກົງ. ເຖິງແມ່ນພວກເຈົ້າບໍ່ເຂົ້າສູ່ພຣະວິຫານ, ສິ່ງທີ່ພວກເຈົ້າໄດ້ຮັບ ແລະ ສິ່ງທີ່ພວກເຈົ້າໄດ້ເຫັນກໍມີຫຼາຍກວ່າສິ່ງທີ່ປະໂລຫິດຜູ້ທີ່ຮັບໃຊ້ພຣະເຢໂຮວາໃນພຣະວິຫານໄດ້ຮັບ. ແຕ່ພວກເຈົ້າກະບົດ ແລະ ຕໍ່ຕ້ານຫຼາຍກວ່າພວກເຂົາເຮັດ. ຄວາມເຄົາລົບນັບຖືຂອງພວກເຈົ້າກໍມີໜ້ອຍດຽວ ແລະ ຜົນຕາມມາກໍຄື ພວກເຈົ້າໄດ້ຮັບຄວາມກະລຸນາພຽງເລັກນ້ອຍ. ເຖິງແມ່ນພວກເຈົ້າອຸທິດພຽງໜ້ອຍດຽວ, ແຕ່ພວກເຈົ້າກໍໄດ້ຮັບຫຼາຍກວ່າຊາວອິດສະຣາເອນ. ທຸກສິ່ງເຫຼົ່ານີ້, ພວກເຈົ້າບໍ່ໄດ້ຖືກປະຕິບັດຕໍ່ເປັນຢ່າງດີບໍ? ໃນຂະນະທີ່ພາລະກິດຢູ່ໃນອິດສະຣາເອນຖືກປະຕິບັດ, ບໍ່ມີໃຜກ້າຕັດສິນພຣະເຢໂຮວາຢ່າງຕາມໃຈ. ແລ້ວພວກເຈົ້າເດ? ຖ້າບໍ່ແມ່ນຍ້ອນພາລະກິດທີ່ເຮົາປະຕິບັດທ່າມກາງພວກເຈົ້າແມ່ນພາລະກິດເພື່ອເອົາຊະນະພວກເຈົ້າແລ້ວ, ເຮົາຈະສາມາດອົດກັ້ນຕໍ່ການທີ່ພວກເຈົ້ານຳເອົາຄວາມອັບອາຍຢ່າງເຫຼືອເຊື່ອມາສູ່ຊື່ສຽງຂອງເຮົາໄດ້ແນວໃດ? ຖ້າຍຸກທີ່ພວກເຈົ້າດຳລົງຊີວິດຢູ່ແມ່ນຍຸກແຫ່ງພຣະບັນຍັດ, ເບິ່ງຈາກຄຳເວົ້າ ແລະ ການກະທຳຂອງພວກເຈົ້າແລ້ວ ພວກເຈົ້າຈະບໍ່ມີຊີວິດຢູ່ລອດແມ່ນແຕ່ຄົນດຽວ. ຄວາມເຄົາລົບນັບຖືຂອງພວກເຈົ້າແມ່ນໜ້ອຍຫຼາຍ! ພວກເຈົ້າກ່າວໂທດເຮົາຢູ່ສະເໝີວ່າບໍ່ຍອມປະທານຄວາມນິຍົມຊົມຊອບໃຫ້ກັບພວກເຈົ້າ ແລະ ພວກເຈົ້າເຖິງກັບເວົ້າວ່າ ເຮົາບໍ່ໄດ້ມອບພຣະທຳແຫ່ງພອນຢ່າງພຽງພໍໃຫ້ກັບພວກເຈົ້າ ແລະ ເຮົາມີພຽງແຕ່ຄຳສາບແຊ່ງສຳລັບພວກເຈົ້າ. ພວກເຈົ້າບໍ່ຮູ້ບໍວ່າ ດ້ວຍຄວາມເຄົາລົບນັບຖືທີ່ເລັກນ້ອຍແບບນັ້ນ ມັນເປັນໄປບໍ່ໄດ້ທີ່ພວກເຈົ້າຈະໄດ້ຮັບພອນຂອງເຮົາ? ພວກເຈົ້າບໍ່ຮູ້ບໍວ່າ ເຮົາສາບແຊ່ງ ແລະ ໂຍນຄຳພິພາກສາລົງໃສ່ພວກເຈົ້າຕະຫຼອດເວລາກໍຍ້ອນສະພາວະທີ່ເປັນຕາສົມເພດໃນການຮັບໃຊ້ຂອງພວກເຈົ້າ? ພວກເຈົ້າທຸກຄົນຮູ້ສຶກວ່າ ພວກເຈົ້າຖືກປະຕິບັດຕໍ່ຢ່າງຜິດໆ? ເຮົາຈະປະທານພອນຂອງເຮົາໃຫ້ກຸ່ມຄົນທີ່ກະບົດ ແລະ ບໍ່ເຊື່ອຟັງໄດ້ແນວໃດ? ເຮົາຈະສາມາດປະທານຄວາມກະລຸນາຂອງເຮົາໃຫ້ກັບຄົນທີ່ນຳຄວາມເສື່ອມເສຍມາສູ່ຊື່ສຽງຂອງເຮົາໄດ້ແນວໃດ? ພວກເຈົ້າຖືກປະຕິບັດຕໍ່ຢ່າງດີທີ່ສຸດແລ້ວ. ຖ້າຊາວອິດສະຣາເອນກະບົດຄືກັບທີ່ພວກເຈົ້າເປັນໃນປັດຈຸບັນນີ້, ເຮົາຈະທຳລາຍລ້າງພວກເຂົາແຕ່ດົນແລ້ວ. ແຕ່ເຮົາກໍປະຕິບັດຕໍ່ພວກເຈົ້າຢ່າງດີ. ນີ້ບໍ່ແມ່ນຄວາມເມດຕາບໍ? ພວກເຈົ້າຕ້ອງການພອນທີ່ຍິ່ງໃຫຍ່ກວ່ານີ້ບໍ? ພຣະເຢໂຮວາໃຫ້ພອນຄົນທີ່ເຄົາລົບນັບຖືພຣະອົງເທົ່ານັ້ນ. ພຣະອົງຂ້ຽນຕີຄົນທີ່ກະບົດຕໍ່ພຣະອົງ, ບໍ່ເຄີຍຍົກໂທດໃຫ້ໃຜຈັກເທື່ອ. ພວກເຈົ້າທຸກຄົນໃນປັດຈຸບັນຜູ້ທີ່ບໍ່ຮູ້ຈັກວິທີການຮັບໃຊ້ຈະບໍ່ຕ້ອງການຖືກຂ້ຽນຕີ ແລະ ພິພາກສາຫຼາຍກວ່າບໍ, ເພື່ອວ່າຫົວໃຈຂອງພວກເຈົ້າອາດໄດ້ຮັບການກັບໃຈຢ່າງສົມບູນ? ການຂ້ຽນຕີ ແລະ ການພິພາກສາແບບນີ້ບໍ່ແມ່ນການໃຫ້ພອນທີ່ດີທີ່ສຸດສຳລັບພວກເຈົ້າບໍ? ມັນບໍ່ແມ່ນການປົກປ້ອງທີ່ດີທີ່ສຸດຂອງພວກເຈົ້າບໍ? ຫາກປາສະຈາກສິ່ງນີ້, ພວກເຈົ້າຈະສາມາດອົດກັ້ນຕໍ່ໄຟທີ່ເຜົາໄໝ້ຂອງພຣະເຢໂຮວາໄດ້ບໍ? ຖ້າພວກເຈົ້າສາມາດຮັບໃຊ້ຢ່າງຊື່ສັດຄືກັບຊາວອິດສະຣາເອນຢ່າງແທ້ຈິງ, ພວກເຈົ້າຈະບໍ່ມີຄວາມກະລຸນາທີ່ເປັນເພື່ອນຊະນິດຂອງພວກເຈົ້າຕະຫຼອດເວລາບໍ? ພວກເຈົ້າຈະບໍ່ມີຄວາມປິຕິຍິນດີ ແລະ ຄວາມນິຍົມຊົມຊອບທີ່ພຽງພໍຢູ່ເລື້ອຍໆບໍ? ພວກເຈົ້າທຸກຄົນຮູ້ຈັກວິທີຮັບໃຊ້ບໍ?

ໃນປັດຈຸບັນ ການຮຽກຮ້ອງໃຫ້ພວກເຈົ້າປະຕິບັດພາລະກິດຮ່ວມກັນຢ່າງປອງດອງແມ່ນຄ້າຍຄື ກັບການຮັບໃຊ້ທີ່ພຣະເຢໂຮວາຮຽກຮ້ອງຈາກຊາວອິດສະຣາເອນ: ບໍ່ດັ່ງນັ້ນ ກໍໃຫ້ຢຸດການຮັບໃຊ້. ເພາະພວກເຈົ້າເປັນຄົນທີ່ຮັບໃຊ້ພຣະເຈົ້າໂດຍກົງ, ຢ່າງໜ້ອຍສຸດ ພວກເຈົ້າກໍຕ້ອງສາມາດຊື່ສັດ ແລະ ເຊື່ອຟັງໃນການຮັບໃຊ້ຂອງພວກເຈົ້າ ແລະ ຕ້ອງສາມາດຮຽນຮູ້ບົດຮຽນໃນທາງທີ່ເປັນຈິງ. ໂດຍສະເພາະຄົນທີ່ກຳລັງປະຕິບັດພາລະກິດໃນຄຣິສຕະຈັກ, ອ້າຍເອື້ອຍນ້ອງທີ່ຢູ່ໃນລະດັບຕໍ່າກວ່າພວກເຈົ້າຈະກ້າຈັດການກັບພວກເຈົ້າໄດ້ບໍ? ມີໃຜທີ່ກ້າບອກພວກເຈົ້າກ່ຽວກັບຄວາມຜິດພາດຂອງພວກເຈົ້າຕໍ່ໜ້າຕໍ່ຕາບໍ? ພວກເຈົ້າມີຕຳແໜ່ງສູງກວ່າທຸກຄົນ, ພວກເຈົ້າປົກຄອງດັ່ງກະສັດ! ພວກເຈົ້າບໍ່ໄດ້ສຶກສາ ຫຼື ເຂົ້າສູ່ບົດຮຽນຕົວຈິງດັ່ງກ່າວ ແຕ່ພວກເຈົ້າກໍຍັງເວົ້າເຖິງການຮັບໃຊ້ພຣະເຈົ້າ! ໃນປັດຈຸບັນ ເຈົ້າຖືກຮຽກຮ້ອງໃຫ້ນຳພາຄຣິສຕະຈັກຈຳນວນໜຶ່ງ ແລະ ບໍ່ພຽງແຕ່ເຈົ້າບໍ່ເສຍສະຫຼະຕົນເອງ, ເຈົ້າຍັງຍຶດຕິດກັບແນວຄິດ ແລະ ຄວາມຄິດເຫັນຂອງເຈົ້າເອງ, ເຈົ້າເວົ້າສິ່ງຕ່າງໆ ເຊັ່ນ: “ຂ້ານ້ອຍຄິດວ່າ ສິ່ງນີ້ຄວນເຮັດແບບນີ້, ເພາະວ່າພຣະເຈົ້າໄດ້ກ່າວວ່າ ພວກເຮົາບໍ່ຄວນໃຫ້ຄົນອື່ນບັງຄັບ ແລະ ໃນປັດຈຸບັນນີ້ ພວກເຮົາບໍ່ຄວນຍອມຢ່າງຫຼັບຫູຫຼັບຕາ”. ສະນັ້ນ ພວກເຈົ້າແຕ່ລະຄົນກໍເລີຍຍຶດໝັ້ນກັບຄວາມຄິດເຫັນຂອງຕົນເອງ ແລະ ບໍ່ມີໃຜເຊື່ອຟັງເຊິ່ງກັນແລະກັນເລີຍ. ເຖິງແມ່ນເຈົ້າຮູ້ຈັກຢ່າງຊັດເຈນວ່າການຮັບໃຊ້ຂອງເຈົ້າມາເຖິງທາງຕັນ, ເຈົ້າກໍຍັງເວົ້າວ່າ “ຕາມທີ່ຂ້າພະເຈົ້າເຫັນ, ຫົນທາງຂອງຂ້າພະເຈົ້າກໍບໍ່ໄດ້ໄກຈາກຄວາມເປັນຈິງ. ຢ່າງໃດກໍຕາມ ພວກເຮົາແຕ່ລະຝ່າຍກໍມີດ້ານຂອງໃຜລາວ: ທ່ານກໍເວົ້າກ່ຽວກັບການຮັບໃຊ້ຂອງທ່ານ ແລະ ຂ້າພະເຈົ້າກໍຈະເວົ້າກ່ຽວກັບການຮັບໃຊ້ຂອງຂ້າພະເຈົ້າ; ທ່ານສົນທະນາກ່ຽວກັບນິມິດຂອງທ່ານ ແລະ ຂ້າພະເຈົ້າກໍຈະເວົ້າກ່ຽວກັບທາງເຂົ້າຂອງຂ້າພະເຈົ້າ”. ເຈົ້າບໍ່ເຄີຍຮັບຜິດຊອບຕໍ່ຫຼາຍສິ່ງທີ່ຄວນຖືກປະຕິບັດ ຫຼື ເຈົ້າພຽງແຕ່ເຮັດ, ພວກເຈົ້າແຕ່ລະຄົນລະບາຍຄວາມຄິດເຫັນຂອງຕົນເອງ ແລະ ປົກປ້ອງສະຖານະ, ຊື່ສຽງ ແລະ ໜ້າຕາຂອງຕົນເອງຢ່າງລະມັດລະວັງ. ບໍ່ມີໃຜເຕັມໃຈທີ່ຈະຖ່ອມຕົວ ແລະ ບໍ່ມີຝ່າຍໃດລິເລີ່ມຍອມເສຍສະຫຼະຕົນເອງ ແລະ ປັບປຸງຄວາມບົກຜ່ອງເຊິ່ງກັນແລະກັນເພື່ອວ່າຊີວິດຈະໄດ້ຄືບໜ້າໄວຍິ່ງຂຶ້ນ. ເມື່ອພວກເຈົ້າຮ່ວມມືກັນ, ພວກເຈົ້າຄວນຮຽນຮູ້ທີ່ຈະສະແຫວງຫາຄວາມຈິງ. ພວກເຈົ້າຄວນເວົ້າວ່າ “ຂ້າພະເຈົ້າບໍ່ມີຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບຄວາມຈິງໃນດ້ານນີ້. ທ່ານມີປະສົບການຫຍັງກ່ຽວກັບສິ່ງນີ້ບໍ່?” ຫຼື ພວກເຈົ້າຄວນເວົ້າວ່າ “ທ່ານມີປະສົບການກ່ຽວກັບດ້ານນີ້ຫຼາຍກວ່າຂ້າພະເຈົ້າ; ທ່ານກະລຸນາໃຫ້ຄຳແນະນຳແກ່ຂ້າພະເຈົ້າໄດ້ບໍ?” ນີ້ບໍ່ແມ່ນວິທີທີ່ດີໃນການປະຕິບັດສິ່ງນີ້ບໍ? ພວກເຈົ້າໄດ້ຟັງຄຳເທດສະໜາຢ່າງຫຼວງຫຼາຍ ແລະ ມີປະສົບການບາງຢ່າງກ່າວກັບການຮັບໃຊ້. ຖ້າພວກເຈົ້າບໍ່ຮຽນຮູ້ຈາກກັນແລະກັນ, ຊ່ວຍເຫຼືອກັນ, ທົດແທນຂໍ້ບົກຜ່ອງເຊິ່ງກັນແລະກັນໃນເວລາປະຕິບັດພາລະກິດຢູ່ໃນຄຣິສຕະຈັກ, ແລ້ວພວກເຈົ້າຈະສາມາດຮຽນຮູ້ບົດຮຽນໄດ້ແນວໃດ? ເມື່ອພວກເຈົ້າພະເຊີນກັບສິ່ງໃດກໍຕາມ, ພວກເຈົ້າກໍຄວນສົນທະນາກັນ ເພື່ອວ່າຊີວິດຂອງພວກເຈົ້າຈະໄດ້ຮັບຜົນປະໂຫຍດ. ຍິ່ງໄປກວ່ານັ້ນ, ພວກເຈົ້າຄວນສົນທະນາກ່ຽວກັບສິ່ງຕ່າງໆຢ່າງລະມັດລະວັງກ່ອນທີ່ຈະຕັດສິນໃຈ. ມີພຽງການເຮັດແບບນັ້ນເທົ່ານັ້ນ ພວກເຈົ້າຈຶ່ງຈະມີຄວາມຮັບຜິດຊອບຕໍ່ຄຣິສຕະຈັກ ແລະ ບໍ່ແມ່ນເປັນການເຮັດພໍ

ເປັນພິທີ. ຫຼັງຈາກທີ່ພວກເຈົ້າຢ້ຽມຢາມຄຣິສຕະຈັກທັງໝົດ, ພວກເຈົ້າຄວນຢູ່ຮ່ວມກັນ ແລະ ສົນທະນາກ່ຽວກັບທຸກບັນຫາທີ່ພວກເຈົ້າຄົ້ນພົບ ແລະ ບັນຫາໃດກໍຕາມທີ່ຜະເຊີນໃນພາລະກິດ ແລະ ພວກເຈົ້າຄວນສື່ສານກ່ຽວກັບແສງສະຫວ່າງ ແລະ ແສງເຍືອງທາງທີ່ພວກເຈົ້າໄດ້ຮັບ, ນີ້ແມ່ນການປະຕິບັດການຮັບໃຊ້ທີ່ຂາດບໍ່ໄດ້. ພວກເຈົ້າຕ້ອງບັນລຸການຮ່ວມມືແບບປອງດອງກັນເພື່ອຈຸດປະສົງຂອງພາລະກິດຂອງພຣະເຈົ້າ, ເພື່ອຜົນປະໂຫຍດຂອງຄຣິສຕະຈັກ ແລະ ເພື່ອກະຕຸ້ນອ້າຍເອື້ອຍນ້ອງຂອງພວກເຈົ້າໃຫ້ກ້າວໄປຂ້າງໜ້າ. ພວກເຈົ້າຄວນປະສານງານກັນ, ແຕ່ລະຄົນຄວນແກ້ໄຂບັນຫາໃຫ້ກັນແລະກັນ ແລະ ບັນລຸຜົນຮັບຂອງພາລະກິດທີ່ດີຂຶ້ນ ເພື່ອໃສ່ໃຈກັບຄວາມປະສົງຂອງພຣະເຈົ້າ. ນີ້ແມ່ນການຮ່ວມມືທີ່ແທ້ຈິງ ແລະ ມີພຽງແຕ່ຄົນທີ່ປະຕິບັດໃນສິ່ງນີ້ເທົ່ານັ້ນຈຶ່ງຈະໄດ້ຮັບທາງເຂົ້າທີ່ແທ້ຈິງ. ໃນຂະນະທີ່ຮ່ວມມືກັນ ມີບາງຄຳເວົ້າທີ່ເຈົ້າເວົ້າອາດຈະບໍ່ເໝາະສົມ, ແຕ່ນັ້ນກໍບໍ່ເປັນຫຍັງ. ໃຫ້ສົນທະນາກ່ຽວກັບສິ່ງນັ້ນໃນມື້ໜ້າ ແລະ ເຂົ້າໃຈມັນຢ່າງຊັດເຈນ; ຢ່າປະລະມັນ. ຫຼັງຈາກການສົນທະນາແບບນີ້ ເຈົ້າຈຶ່ງສາມາດທົດແທນຂໍ້ບົກຜ່ອງສຳລັບອ້າຍເອື້ອຍນ້ອງຂອງເຈົ້າ. ມີພຽງການລົງເລິກຢ່າງບໍ່ຢຸດຢັ້ງແບບນີ້ໃນພາລະກິດຂອງເຈົ້າ, ເຈົ້າຈຶ່ງສາມາດບັນລຸຜົນຕາມມາທີ່ດີຂຶ້ນ. ພວກເຈົ້າແຕ່ລະຄົນ ໃນຖານະທີ່ເປັນຄົນຮັບໃຊ້ ຕ້ອງສາມາດປົກປ້ອງຜົນປະໂຫຍດຂອງຄຣິສຕະຈັກໃນທຸກສິ່ງທີ່ພວກເຈົ້າເຮັດ, ແທນທີ່ຈະຄອຍລະວັງຜົນປະໂຫຍດຂອງພວກເຈົ້າເອງ. ມັນເປັນສິ່ງທີ່ຮັບບໍ່ໄດ້ທີ່ຈະປະຕິບັດພຽງຄົນດຽວ ແລະ ທຳລາຍກັນເອງ. ຄົນປະເພດນີ້ມີອຸປະນິໄສຊົ່ວຮ້າຍຫຼາຍ; ບໍ່ມີຄວາມເປັນມະນຸດແມ່ນແຕ່ໜ້ອຍດຽວໃນພວກເຂົາ. ພວກເຂົາເປັນຊາຕານຮ້ອຍເປີເຊັນ! ພວກເຂົາເປັນສັດຮ້າຍ! ແມ່ນແຕ່ໃນປັດຈຸບັນ ສິ່ງດັ່ງກ່າວກໍຍັງເກີດຂຶ້ນໃນທ່າມກາງພວກເຈົ້າ; ພວກເຈົ້າເຖິງຂັ້ນໂຈມຕີກັນລະຫວ່າງການສົນທະນາ, ຕັ້ງໃຈຊອກຫາຂໍ້ອ້າງ ແລະ ພາກັນໜ້າແດງໃນຂະນະທີ່ຖົກຖຽງກັນໃນສິ່ງເລັກນ້ອຍ, ບໍ່ມີໃຜເຕັມໃຈທີ່ຈະປ່ອຍວາງຕົນເອງ, ແຕ່ລະຄົນປົກປິດແນວຄິດທີ່ຢູ່ຂ້າງໃນຈາກກັນແລະກັນ, ຈ້ອງເບິ່ງອີກຝ່າຍໜຶ່ງຢ່າງຕັ້ງອົກຕັ້ງໃຈ ແລະ ລະແວງກັນຢູ່ສະເໝີ. ອຸປະນິໄສແບບນີ້ຈະເໝາະສົມແກ່ການຮັບໃຊ້ພຣະເຈົ້າໄດ້ບໍ? ພາລະກິດແບບນີ້ຂອງພວກເຈົ້າຈະສະໜອງໃຫ້ກັບອ້າຍເອື້ອຍນ້ອງໄດ້ບໍ? ບໍ່ແມ່ນພຽງເຈົ້າຈະບໍ່ສາມາດນຳພາຜູ້ຄົນໄປໃນທາງຊີວິດທີ່ຖືກຕ້ອງເທົ່ານັ້ນ, ແຕ່ທີ່ຈິງແລ້ວ ເຈົ້າຍັງຈະສັກອຸປະນິໄສອັນເສື່ອມຊາມຂອງເຈົ້າໃສ່ອ້າຍເອື້ອຍນ້ອງອີກດ້ວຍ. ເຈົ້າບໍ່ໄດ້ກຳລັງທຳຮ້າຍຄົນອື່ນບໍ? ຄວາມສຳນຶກຂອງເຈົ້າຊົ່ວຫຼາຍ ແລະ ມັນເໜົ່າເປື່ອຍຈົນເຖິງແກ່ນ! ເຈົ້າບໍ່ໄດ້ເຂົ້າສູ່ຄວາມເປັນຈິງ ແລະ ບໍ່ໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ. ຍິ່ງໄປກວ່ານັ້ນ ເຈົ້າເປີດໂປງທຳມະຊາດທີ່ຊົ່ວຮ້າຍຂອງເຈົ້າໂດຍບໍ່ມີຢາງອາຍໃຫ້ກັບຄົນອື່ນເຫັນ, ເຈົ້າຊ່າງບໍ່ມີຄວາມອັບອາຍແທ້ໆ! ອ້າຍເອື້ອຍນ້ອງເຫຼົ່ານີ້ໄດ້ຖືກມອບໝາຍໄວ້ໃຫ້ກັບເຈົ້າ, ແຕ່ເຈົ້ານຳພາພວກເຂົາໄປສູ່ນະຮົກ. ເຈົ້າບໍ່ແມ່ນບຸກຄົນທີ່ມີຄວາມສຳນຶກທີ່ເໜົ່າເປື່ອຍບໍ? ເຈົ້າຊ່າງບໍ່ມີຢາງອາຍແທ້ໆ!

# ການເພີ່ມຄວາມສາມາດແມ່ນເພື່ອ ຮັບເອົາຄວາມລອດພົ້ນຂອງພຣະເຈົ້າ

ການເພີ່ມຄວາມສາມາດຂອງຄົນໝາຍເຖິງການຕ້ອງການໃຫ້ພວກເຈົ້າປັບປຸງພະລັງແຫ່ງຄວາມເຂົ້າໃຈຂອງພວກເຈົ້າ ເພື່ອໃຫ້ພວກເຈົ້າສາມາດເຂົ້າໃຈ ແລະ ຮູ້ຈັກວິທີປະຕິບັດຕາມພຣະທຳຂອງພຣະເຈົ້າ. ນີ້ຄືຂໍ້ກຳນົດຂັ້ນພື້ນຖານທີ່ສຸດ. ຖ້າເຈົ້າບໍ່ເຂົ້າໃຈໃນສິ່ງທີ່ເຮົາໄດ້ກ່າວ ແຕ່ພາກັນປະຕິບັດຕາມເຮົາ, ການເຮັດແບບນັ້ນບໍ່ແມ່ນຄວາມເຊື່ອແບບມືດມົວບໍ? ບໍ່ວ່າເຮົາຈະກ່າວພຣະທຳຫຼາຍຂໍ້ປານໃດກໍຕາມ, ຖ້າພວກເຈົ້າບໍ່ສາມາດຢັ່ງເຖິງພຣະທຳເຫຼົ່ານັ້ນໄດ້, ຖ້າພວກເຈົ້າບໍ່ສາມາດເຂົ້າໃຈພຣະທຳເຫຼົ່ານັ້ນໄດ້ ບໍ່ວ່າເຮົາຈະກ່າວຫຍັງກໍຕາມ, ນີ້ກໍຈະໝາຍຄວາມວ່າ ພວກເຈົ້າຂາດຄວາມສາມາດ. ຖ້າປາສະຈາກພະລັງແຫ່ງຄວາມເຂົ້າໃຈແລ້ວ ພວກເຈົ້າກໍບໍ່ເຂົ້າໃຈສິ່ງທີ່ເຮົາກ່າວເລີຍ ເຊິ່ງເຮັດໃຫ້ຍາກຫຼາຍທີ່ຈະບັນລຸຜົນທີ່ຕ້ອງການ; ມີຫຼາຍສິ່ງທີ່ເຮົາບໍ່ສາມາດກ່າວຕໍ່ພວກເຈົ້າໄດ້ໂດຍກົງ ແລະ ບໍ່ສາມາດບັນລຸຜົນຕາມທີ່ຕ້ອງການໄດ້, ເພາະສະນັ້ນ ຈຶ່ງຈຳເປັນຕ້ອງມີພາລະກິດເພີ່ມເຕີມອີກ. ເນື່ອງຈາກພະລັງແຫ່ງຄວາມເຂົ້າໃຈຂອງພວກເຈົ້າ, ຄວາມສາມາດໃນການເຫັນສິ່ງຕ່າງໆ ແລະ ມາດຕະຖານທີ່ພວກເຈົ້າດຳລົງຊີວິດຢູ່ນັ້ນຕໍ່າເກີນໄປ, ການປະຕິບັດພາລະກິດແຫ່ງ "ການຍົກຄວາມສາມາດ" ຈຶ່ງຕ້ອງດຳເນີນໃນຕົວພວກເຈົ້າ. ນີ້ແມ່ນສິ່ງທີ່ບໍ່ສາມາດຫຼີກເວັ້ນໄດ້ ແລະ ບໍ່ມີທາງເລືອກອື່ນ. ມີແຕ່ແບບນີ້ເທົ່ານັ້ນຈຶ່ງສາມາດບັນລຸຜົນບາງຢ່າງໄດ້; ຖ້າບໍ່ດັ່ງນັ້ນ, ພຣະທຳທຸກຂໍ້ທີ່ເຮົາກ່າວໄປນັ້ນຈະບໍ່ມີປະໂຫຍດຫຍັງເລີຍ ແລ້ວພວກເຈົ້າທຸກຄົນຈະບໍ່ໄດ້ຖືກຈາລຶກໄວ້ໃນປຶ້ມປະຫວັດສາດວ່າ ເປັນຄົນບາບບໍ? ພວກເຈົ້າຈະບໍ່ກາຍເປັນຄົນເສື່ອມຊາມທີ່ສຸດຂອງແຜ່ນດິນໂລກບໍ? ພວກເຈົ້າບໍ່ຮູ້ບໍວ່າ ພາລະກິດໃດທີ່ຖືກປະຕິບັດກັບພວກເຈົ້າ ແລະ ແມ່ນຫຍັງຄືສິ່ງທີ່ເຮົາຕ້ອງການຈາກພວກເຈົ້າ? ພວກເຈົ້າຄວນຮູ້ຈັກຄວາມສາມາດຂອງຕົວເອງ ເຊິ່ງເຮົາຂໍບອກວ່າ: ມັນບໍ່ເຖິງລະດັບທີ່ເຮົາຕ້ອງການເລີຍ. ແບບນີ້ຈະບໍ່ເຮັດໃຫ້ພາລະກິດຂອງເຮົາຊັກຊ້າບໍ່? ອີງຕາມຄວາມສາມາດ ແລະ ສະພາບບຸກຄະລິກໃນປັດຈຸບັນຂອງພວກເຈົ້າ, ພວກເຈົ້າບໍ່ເໝາະສົມຈະເປັນພະຍານໃຫ້ກັບເຮົາ ແລະ ບໍ່ມີໃຜສາມາດຮັບຜິດຊອບໜ້າທີ່ອັນໜັກໜ່ວງຕໍ່ພາລະກິດຂອງເຮົາໃນອະນາຄົດໄດ້ເລີຍ. ພວກເຈົ້າບໍ່ຮູ້ສຶກອັບອາຍແດ່ບໍ? ຖ້າເຈົ້າສືບຕໍ່ເປັນແບບນີ້, ເຈົ້າຈະສາມາດປະຕິບັດຕາມຄວາມປະສົງຂອງເຮົາໄດ້ແນວໃດ? ເຈົ້າຄວນໃຊ້ຊີວິດຂອງເຈົ້າໃຫ້ເຕັມທີ່. ຢ່າປ່ອຍໃຫ້ເວລາຜ່ານໄປໂດຍບໍ່ມີປະໂຫຍດ. ການເຮັດແນວນັ້ນບໍ່ມີຄຸນຄ່າຫຍັງທັງສິ້ນ. ເຈົ້າຄວນຮູ້ໃນສິ່ງທີ່ເຈົ້າຄວນມີ. ຈົ່ງຢ່າຄິດວ່າຕົນເອງເປັນຄົນເກັ່ງໃນທຸກເລື່ອງ ເພາະເຈົ້າຍັງຕ້ອງໄດ້ຝຶກຝົນອີກດົນ! ຖ້າເຈົ້າບໍ່ມີແມ່ນແຕ່ສາມັນສຳນຶກຂັ້ນພື້ນຖານຂອງຄວາມເປັນມະນຸດ ແລ້ວຈະຕ້ອງໃຫ້ເວົ້າຫຍັງອີກ? ສິ່ງນີ້ບໍ່ໄຮ້ປະໂຫຍດທັງໝົດບໍ? ສ່ວນຄວາມເປັນມະນຸດ ແລະ ຄວາມສາມາດທີ່ເຮົາຮຽກຮ້ອງ, ບໍ່ມີແມ່ນແຕ່ຄົນດຽວໃນບັນດາພວກເຈົ້າທີ່ຈະມີຄຸນສົມບັດຢ່າງຄົບຖ້ວນ. ມັນຍາກທີ່ສຸດທີ່ຈະຊອກຫາຄົນໃດໜຶ່ງທີ່ເໝາະສົມເພື່ອໃຫ້ນຳໃຊ້. ພວກເຈົ້າເຊື່ອວ່າ ຕົວເອງສາມາດປະຕິບັດພາລະກິດອັນຍິ່ງໃຫຍ່ເພື່ອເຮົາ ແລະ ສາມາດໄດ້ຮັບ

ຄວາມໄວ້ວາງໃຈເພື່ອຮັບເອົາສິ່ງທີ່ຍິ່ງໃຫຍ່ຈາກເຮົາໄດ້; ຄວາມຈິງແລ້ວ, ພວກເຈົ້າບໍ່ຮູ້ແມ່ນແຕ່ວິທີເຂົ້າສູ່ບົດຮຽນທີ່ຢູ່ຕໍ່ໜ້າພວກເຈົ້າອີກຊໍ້າ, ແລ້ວມັນຈະເປັນໄປໄດ້ແນວໃດທີ່ຈະເຂົ້າສູ່ຄວາມຈິງທີ່ເລິກເຊິ່ງໄດ້? ທາງເຂົ້າຂອງພວກເຈົ້າຄວນມີວິທີການທີ່ເປັນຂັ້ນຕອນ ແລະ ມີລະດັບ. ມັນຕ້ອງບໍ່ວຸ້ນວາຍ, ນັ້ນບໍ່ເປັນຜົນດີ. ຈົ່ງເລີ່ມກັບທາງເຂົ້າທີ່ຕື້ນທີ່ສຸດ: ຈົ່ງອ່ານພຣະທຳແຕ່ລະແຖວຈົນກວ່າພວກເຈົ້າຈະເຂົ້າໃຈຢ່າງແຈ່ມແຈ້ງ. ເມື່ອພວກເຈົ້າອ່ານພຣະທຳຂອງພຣະເຈົ້າ, ຢ່າພຽງແຕ່ເບິ່ງຜ່ານໆຄືກັບວ່າກຳລັງຊື່ນຊົມດອກໄມ້ໃນຂະນະທີ່ນັ່ງຢູ່ເທິງຫຼັງມ້າ ແລະ ຢ່າເຮັດໂດຍບໍ່ຕັ້ງໃຈ. ເຈົ້າຍັງສາມາດອ່ານປຶ້ມອ້າງອີງບາງເຫຼັ້ມເປັນປະຈຳ (ເຊັ່ນ: ປຶ້ມກ່ຽວກັບໄວຍະກອນ ຫຼື ປຶ້ມສິລະປະໃນການໃຊ້ຄຳເວົ້າ) ເພື່ອພັດທະນາຄວາມຮູ້ຂອງພວກເຈົ້າ. ຢ່າອ່ານປຶ້ມແບບນະວະນິຍາຍຮັກ, ຊີວະປະຫວັດຂອງຜູ້ທີ່ຍິ່ງໃຫຍ່ຕ່າງໆ ຫຼື ປຶ້ມທີ່ກ່ຽວກັບວິທະຍາສາດສັງຄົມ; ປຶ້ມເຫຼົ່ານີ້ບໍ່ມີປະໂຫຍດ ແລະ ພຽງແຕ່ສ້າງຜົນເສຍຫາຍເທົ່ານັ້ນ. ເຈົ້າຕ້ອງເກັ່ງທຸກຢ່າງທີ່ເຈົ້າຄວນເຂົ້າສູ່ ແລະ ຕ້ອງເຂົ້າໃຈ. ຈຸດປະສົງໃນການຍົກຄວາມສາມາດຂອງຜູ້ຄົນແມ່ນເພື່ອເຮັດໃຫ້ຜູ້ຄົນຮູ້ຈັກແກ່ນແທ້, ເອກະລັກ, ສະຖານະ ແລະ ຄຸນຄ່າຂອງຕົວເອງ. ພວກເຈົ້າຄວນເຂົ້າໃຈວ່າ ເປັນຫຍັງຜູ້ຄົນຈຶ່ງຕ້ອງສະແຫວງຫາຄວາມຈິງໃນການເຊື່ອໃນພຣະເຈົ້າ ແລະ ມັນເປັນທີ່ຍອມຮັບ ຫຼື ບໍ່ທີ່ຜູ້ຄົນຈະບໍ່ຍົກຄວາມສາມາດຂອງພວກເຂົາ. ມັນສຳຄັນທີ່ພວກເຈົ້າຕ້ອງອົບຮົມສຶກສາຕົນເອງ; ພວກເຈົ້າຕ້ອງບໍ່ໂຍນສິ່ງນີ້ຖິ້ມໄປ! ພວກເຈົ້າຕ້ອງເຂົ້າໃຈວ່າ ເປັນຫຍັງຄວາມສາມາດຂອງຜູ້ຄົນຈຶ່ງຕ້ອງໄດ້ຖືກຍົກຂຶ້ນ, ຄວນຍົກມັນຂຶ້ນດ້ວຍວິທີໃດ ແລະ ຈະເຂົ້າສູ່ດ້ານໃດ. ພວກເຈົ້າຕ້ອງເຂົ້າໃຈຄວາມໝາຍຂອງການມີຊີວິດເປັນມະນຸດທຳມະດາ, ເປັນຫຍັງຈຶ່ງຕ້ອງປະຕິບັດພາລະກິດນີ້ ແລະ ພາກສ່ວນໃດທີ່ຜູ້ຄົນຄວນມີບົດບາດ. ຕົວຢ່າງ: ການທີ່ຈະໄດ້ຮັບການສຶກສາ, ພວກເຈົ້າຄວນເຂົ້າໃຈວ່າດ້ານໃດທີ່ຄວນຮຽນຮູ້ ແລະ ຄົນໜຶ່ງຄວນເຂົ້າຫາແນວໃດ. ພວກເຈົ້າທຸກຄົນຄວນຮູ້ວ່າ ເປົ້າໝາຍຂອງການຮຽນຮູ້ແມ່ນຫຍັງ. ແລ້ວການຮຽນຮູ້ບໍ່ແມ່ນ ເພື່ອການເຂົ້າໃຈພຣະທຳຂອງພຣະເຈົ້າ ແລະ ເຂົ້າສູ່ຄວາມຈິງບໍ? ແມ່ນຫຍັງທີ່ໂດດເດັ່ນຢູ່ທົ່ວຄຣິດຕະຈັດໃນປັດຈຸບັນນີ້? ການເຮັດໃຫ້ຜູ້ຄົນສຶກສາຮ່ຳຮຽນເຮັດໃຫ້ພວກເຂົາລືມຄວາມສຸກຈາກພຣະທຳຂອງພຣະເຈົ້າ ແລະ ໃນແຕ່ລະມື້ ພວກເຂົາຈະບໍ່ເຮັດຫຍັງເລີຍ ນອກຈາກການຮ່ຳຮຽນ. ຖ້າຫາກພວກເຈົ້າຮຽກຮ້ອງໃຫ້ພວກເຂົາໃຊ້ຊີວິດເປັນມະນຸດທຳມະດາ, ພວກເຂົາຈະເອົາໃຈໃສ່ແຕ່ການຈັດຄົວເຮືອນຂອງພວກເຂົາ, ການແຕ່ງຢູ່ຄົວກິນ ຫຼື ການຊື້ອຸປະກອນແຕ່ງກິນ. ພວກເຂົາໃສ່ໃຈແຕ່ສິ່ງເຫຼົ່ານີ້ເທົ່ານັ້ນ; ພວກເຂົາບໍ່ຮູ້ຈັກແມ່ນແຕ່ວິທີການນຳໃຊ້ຊີວິດທາງຄຣິສຕະຈັກແບບປົກກະຕິ. ຖ້າເຈົ້າເຫັນວ່າຕົວເອງຢູ່ໃນສະພາບແບບປັດຈຸບັນ ເຈົ້າແມ່ນໄດ້ຫຼົງທາງໃນການປະຕິບັດຂອງເຈົ້າແລ້ວ. ແລ້ວເປັນຫຍັງເຈົ້າຈຶ່ງຖືກຂໍຮ້ອງໃຫ້ເຂົ້າສູ່ຊີວິດທາງຈິດວິນຍານ? ພຽງແຕ່ຮຽນຮູ້ສິ່ງເຫຼົ່ານັ້ນຈະເຮັດໃຫ້ເຈົ້າບໍ່ສາມາດບັນລຸໃນສິ່ງທີ່ຮຽກຮ້ອງຈາກເຈົ້າ. ການເຂົ້າສູ່ຊີວິດຍັງແມ່ນສິ່ງທີ່ສຳຄັນທີ່ສຸດ; ໃນຂະນະດຽວກັນ ເຫດຜົນຂອງການປະຕິບັດພາລະກິດນັ້ນ ແມ່ນເພື່ອແກ້ໄຂຄວາມຫຍຸ້ງຍາກຕ່າງໆທີ່ຜູ້ຄົນຜະເຊີນໃນປະສົບການຂອງພວກເຂົາ. ການຍົກລະດັບຄວາມສາມາດແມ່ນຊ່ວຍໃຫ້ເຈົ້າຮູ້ຈັກເຖິງທຳມະຊາດຂອງມະນຸດ ແລະ ທາດແທ້ຂອງມະນຸດ, ຈຸດປະສົງຕົ້ນຕໍເພື່ອໃຫ້ຊີວິດທາງຈິດວິນຍານຂອງ

ຜູ້ຄົນສາມາດເຕີບໃຫຍ່ ແລະ ເພື່ອໃຫ້ອຸປະນິໄສຂອງພວກເຂົາສາມາດປ່ຽນແປງໄດ້. ເຈົ້າອາດຈະຮູ້ຈັກວິທີການແຕ່ງຕົວ ແລະ ເຮັດໃຫ້ຕົວເອງເບິ່ງຈົບງາມ, ເຈົ້າອາດຈະມີສາຍຕາຫຼັກແຫຼມ ແລະ ສະຫຼຽວສະຫຼາດ ແຕ່ໃນທີ່ສຸດແລ້ວ ເມື່ອຮອດມື້ໃຫ້ເຈົ້າປະຕິບັດພາລະກິດ, ເຈົ້າກໍຈະບໍ່ສາມາດປະຕິບັດມັນໄດ້. ດັ່ງນັ້ນ, ເຈົ້າຄວນຮູ້ສິ່ງທີ່ເຈົ້າຄວນປະຕິບັດເຊັ່ນກັນ ໃນຂະນະທີ່ຍົກລະດັບຄວາມສາມາດຂອງຕົວເອງ. ເປົ້າໝາຍແມ່ນເພື່ອປ່ຽນແປງຕົວເຈົ້າເອງ; ການຍົກລະດັບຄວາມສາມາດຂອງເຈົ້າຄືສິ່ງເພີ່ມເຕີມ. ມັນຈະບໍ່ພຽງພໍ ຖ້າຫາກຄວາມສາມາດຂອງເຈົ້າບໍ່ຖືກປັບປຸງ ແລະ ມັນຈະຍິ່ງຮ້າຍໄປກວ່ານັ້ນ ຖ້າຫາກອຸປະນິໄສຂອງເຈົ້າບໍ່ຖືກປ່ຽນແປງ. ບໍ່ສາມາດລະເວັ້ນຢ່າງໃດຢ່າງໜຶ່ງໄດ້. ການມີຄວາມເປັນມະນຸດທຳມະດາບໍ່ໄດ້ໝາຍຄວາມວ່າ ເຈົ້າໄດ້ເກີດມາເປັນປະຈັກພະຍານທີ່ດັງກ້ອງສະນັ້ນ. ສິ່ງທີ່ຮຽກຮ້ອງຈາກເຈົ້າບໍ່ແມ່ນເລື່ອງງ່າຍດາຍຄືແນວນັ້ນ.

ເມື່ອຄວາມສາມາດຂອງຜູ້ຄົນໄດ້ຖືກຍົກຂຶ້ນຮອດຂອບເຂດທີ່ພວກເຂົາໄດ້ຮັບຄວາມຮູ້ສຶກ ແລະ ຮູບແບບການໃຊ້ຊີວິດແບບມະນຸດທຳມະດາ ແລະ ໄດ້ເຂົ້າສູ່ຊີວິດ, ເມື່ອນັ້ນພວກເຂົາຈຶ່ງມີຄວາມປ່ຽນແປງ ແລະ ເປັນພະຍານທີ່ຈະກ່າວເຖິງ. ເມື່ອຮອດມື້ໃຫ້ເຈົ້າເປັນພະຍານ, ເຈົ້າຕ້ອງເວົ້າກ່ຽວກັບການປ່ຽນແປງໃນຊີວິດມະນຸດຂອງເຈົ້າ ແລະ ຄວາມຮູ້ກ່ຽວກັບພຣະເຈົ້າທີ່ຢູ່ພາຍໃນຕົວເຈົ້າ. ມີແຕ່ການລວມກັນຂອງທັງສອງຢ່າງນີ້ເທົ່ານັ້ນ ທີ່ຈະເປັນພະຍານທີ່ແທ້ຈິງ ແລະ ໄດ້ຮັບຜົນເກັບກ່ຽວຂອງເຈົ້າ. ມັນບໍ່ພຽງພໍ ຖ້າຈະປ່ຽນແປງຄວາມເປັນມະນຸດຂອງເຈົ້າຢູ່ພາຍນອກ ແຕ່ເຈົ້າບໍ່ມີຄວາມເຂົ້າໃຈຢູ່ພາຍໃນ ແລະ ມັນຈະບໍ່ມີຜົນຫຍັງ ຖ້າເຈົ້າມີຄວາມເຂົ້າໃຈ ແລະ ຄວາມຈິງຢູ່ພາຍໃນ ແຕ່ເຈົ້າພັດບໍ່ສົນໃຈ ການໃຊ້ຊີວິດແບບເປັນມະນຸດທຳມະດາ. ພາລະກິດທີ່ປະຕິບັດຕໍ່ເຈົ້າໃນມື້ນີ້ ບໍ່ແມ່ນເພື່ອການສະແດງ ແຕ່ເພື່ອການປ່ຽນແປງເຈົ້າ. ສິ່ງດຽວທີ່ເຈົ້າຕ້ອງເຮັດແມ່ນການເອົາໃຈໃສ່ຕໍ່ການປ່ຽນແປງຕົວເອງ. ມັນຈະບໍ່ພຽງພໍ ຖ້າຈະຂຽນ ແລະ ຟັງທຸກມື້ ໂດຍບໍ່ມີສິ່ງອື່ນໃນຊີວິດຂອງເຈົ້າ; ເຈົ້າຄວນມີການເຂົ້າຫາທຸກໆດ້ານ. ເຈົ້າຄວນມີຊີວິດປົກກະຕິຂອງນັກບຸນ. ເອື້ອຍນ້ອງຫຼາຍຄົນນຸ່ງຖືຄືກັບຍິງສາວ ແລະ ອ້າຍນ້ອງຫຼາຍຄົນນຸ່ງຖືຄືກັບຄົນສູງສົ່ງ ຫຼື ຜູ້ຍິ່ງໃຫຍ່ ໂດຍທີ່ສູນເສຍຄຸນສົມບັດໃນການເປັນນັກບຸນຢ່າງສິ້ນເຊີງ. ການຍົກຄວາມສາມາດຂອງບຸກຄົນແມ່ນດ້ານໜຶ່ງ ເຊິ່ງສາມາດບັນລຸໄດ້ໂດຍບໍ່ຕັ້ງໃຈ. ການກິນ ແລະ ການດື່ມພຣະທຳຂອງພຣະເຈົ້າແມ່ນອີກດ້ານ ເຊິ່ງນີ້ແມ່ນສິ່ງທີ່ສຳຄັນ. ຖ້າຫາກຄວາມສາມາດຂອງເຈົ້າຖືກຍົກຂຶ້ນ ແຕ່ພັດບໍ່ໄດ້ນຳໃຊ້ ຍ້ອນວ່າ ເຈົ້າບໍ່ໄດ້ກິນ ແລະ ດື່ມພຣະທຳຂອງພຣະເຈົ້າ, ຄວາມພະຍາຍາມຂອງເຈົ້າໃນການຮຽນຮູ້ຈະບໍ່ໄດ້ເສຍຖິ້ມໄປຊື່ໆບໍ? ທັງສອງດ້ານຕ້ອງປະສົມປະສານກັນ. ເປັນຫຍັງຈຶ່ງຍົກເອົາເລື່ອງຄວາມຮູ້ກ່ຽວກັບພຣະເຈົ້າຂຶ້ນມາໃນເວລາສົນທະນາກ່ຽວກັບສິ່ງທີ່ຮຽກຮ້ອງຈາກເຈົ້າ? ນີ້ບໍ່ແມ່ນເພື່ອຜົນໄດ້ຮັບຈາກພາລະກິດທີ່ຈະມາເຖິງບໍ? ພາຍຫຼັງທີ່ເຈົ້າໄດ້ຖືກເອົາຊະນະ, ເຈົ້າຕ້ອງສາມາດເປັນພະຍານຈາກປະສົບການຂອງເຈົ້າເອງ. ມັນຈະບໍ່ພຽງພໍ ຖ້າຫາກຮູບຮ່າງພາຍນອກຂອງເຈົ້າເປັນໜຶ່ງໃນຄວາມເປັນມະນຸດແບບປົກກະຕິ ແຕ່ເຈົ້າບໍ່ສາມາດສະແດງປະສົບການຂອງຕົນອອກມາໃຫ້ເປັນຄຳເວົ້າໄດ້. ໃນຂະນະທີ່ມີຊີວິດທາງຈິດວິນຍານທີ່ປົກກະຕິ, ເຈົ້າກໍຄວນໄດ້ຮັບຄວາມເປັນມະນຸດແບບປົກກະຕິ ແລະ ຫຼາຍໆດ້ານທີ່ຈະໄດ້ຮຽນຮູ້ໂດຍບໍ່

ໄດ້ຕັ້ງໃຈ. ເຈົ້າຄິດວ່າ ການກວາດພື້ນຈຳເປັນຕ້ອງມີການຝຶກອົບຮົມພິເສດບໍ? ຮ້າຍໄປກວ່ານັ້ນຄື ການໃຊ້ເວລາເປັນຊົ່ວໂມງເພື່ອຝຶກການໃຊ້ໄມ້ຖູ່ກິນອາຫານ! ຄວາມເປັນມະນຸດປະກອບມີລັກສະນະຫຍັງແດ່? ຄວາມເຂົ້າໃຈເລິກເຊິ່ງ, ຄວາມຮູ້ສຶກ, ສາມັນສຳນຶກ ແລະ ບຸກຄະລິກ. ຖ້າຫາກເຈົ້າສາມາດບັນລຸເຖິງຄວາມເປັນປົກກະຕິໃນແຕ່ລະດ້ານເຫຼົ່ານີ້, ຄວາມເປັນມະນຸດຂອງເຈົ້າກໍຈະມີມາດຕະຖານ. ເຈົ້າຄວນຈະມີຄວາມຄ້າຍຄືກັບມະນຸດແບບປົກກະຕິ ແລະ ເຈົ້າຄວນຄ້າຍຄືກັບຜູ້ທີ່ມີຄວາມເຊື່ອໃນພຣະເຈົ້າ. ເຈົ້າບໍ່ຕ້ອງບັນລຸຫຼາຍເກີນໄປ ຫຼື ມີສ່ວນຮ່ວມໃນວຽກການທູດ; ເຈົ້າພຽງແຕ່ຕ້ອງການເປັນມະນຸດທຳມະດາ ທີ່ມີຄວາມຮູ້ສຶກແບບຄົນປົກກະຕິ, ທີ່ສາມາດເບິ່ງສິ່ງຕ່າງໆອອກ ແລະ ຢ່າງໜ້ອຍກໍເບິ່ງຄ້າຍຄືກັບມະນຸດປົກກະຕິ. ນັ້ນກໍພຽງພໍແລ້ວ. ທຸກສິ່ງທຸກຢ່າງທີ່ຮຽກຮ້ອງຈາກເຈົ້າແມ່ນນອນຢູ່ໃນຄວາມອາດສາມາດຂອງເຈົ້າ; ນີ້ບໍ່ແມ່ນໃນກໍລະນີທີ່ພະຍາຍາມໄລ່ເປັດຂຶ້ນຢອງງ່າໄມ້. ຈະບໍ່ມີການປະຕິບັດພຣະທຳທີ່ບໍ່ມີປະໂຫຍດ ຫຼື ພາລະກິດທີ່ບໍ່ເປັນປະໂຫຍດໃດໆກັບເຈົ້າ. ຄວາມຂີ້ຮ້າຍທັງໝົດທີ່ຖືກສະແດງອອກ ຫຼື ຖືກເປີດເຜີຍຢູ່ໃນຊີວິດຂອງເຈົ້າຕ້ອງຖືກກຳຈັດຖິ້ມ. ພວກເຈົ້າໄດ້ຖືກເຮັດໃຫ້ເສື່ອມຊາມໂດຍຊາຕານ ແລະ ມີພິດຮ້າຍຈາກຊາຕານຫຼາຍເກີນໄປ. ສິ່ງດຽວທີ່ຮຽກຮ້ອງຈາກເຈົ້າກໍຄືການກຳຈັດອຸປະນິໄສທີ່ເສື່ອມຊາມແບບຊາຕານອອກໄປ. ເຈົ້າບໍ່ໄດ້ຖືກຮຽກຮ້ອງໃຫ້ກາຍເປັນຜູ້ມີຍົດສູງສົ່ງ ຫຼື ເປັນຄົນມີຊື່ສຽງ ຫຼື ເປັນຜູ້ຍິ່ງໃຫຍ່. ສິ່ງນັ້ນບໍ່ມີປະໂຫຍດ. ພາລະກິດທີ່ປະຕິບັດກັບພວກເຈົ້າ ແມ່ນຄຳນຶງເຖິງສິ່ງທີ່ມີໃນຕົວພວກເຈົ້າ. ສິ່ງທີ່ເຮົາຂໍຈາກຜູ້ຄົນແມ່ນມີຈຳກັດ. ຖ້າຫາກເຈົ້າປະຕິບັດໃນລັກສະນະ ແລະ ໃນນໍ້າສຽງການເວົ້າຂອງປັນຍາຊົນ, ສິ່ງນີ້ແມ່ນຈະບໍ່ພຽງພໍ; ເຈົ້າຈະບໍ່ສາມາດເຮັດມັນໄດ້. ເນື່ອງຈາກຄວາມສາມາດຂອງພວກເຈົ້າ, ຢ່າງໜ້ອຍພວກເຈົ້າກໍຄວນສາມາດເວົ້າດ້ວຍສະຕິປັນຍາ ແລະ ໄຫວພິບ ແລະ ອະທິບາຍສິ່ງຕ່າງໆໃນລັກສະນະທີ່ຊັດເຈນ ແລະ ເຂົ້າໃຈໄດ້. ນັ້ນແມ່ນສິ່ງທີ່ຕ້ອງມີເພື່ອບັນລຸເງື່ອນໄຂ. ຢ່າງໜ້ອຍສຸດ ຖ້າເຈົ້າໄດ້ຮັບຄວາມຮູ້ທີ່ເລິກເຊິ່ງ ແລະ ມີສາມັນສຳນຶກ, ນັ້ນກໍພຽງພໍແລ້ວ. ສິ່ງທີ່ສຳຄັນທີ່ສຸດໃນເວລານີ້ແມ່ນການປະຖິ້ມອຸປະນິໄສທີ່ເສື່ອມຊາມແບບຊາຕານຂອງເຈົ້າອອກໃຫ້ໝົດ. ເຈົ້າຕ້ອງປະຖິ້ມຄວາມຂີ້ຮ້າຍ ທີ່ເຈົ້າສະແດງອອກໃຫ້ໝົດ. ເຈົ້າຈະສາມາດເວົ້າກ່ຽວກັບຄວາມຮູ້ສຶກສູງສຸດ ແລະ ຄວາມຮູ້ທີ່ເລິກເຊິ່ງທີ່ສຸດໄດ້ແນວໃດ ຖ້າຫາກເຈົ້າບໍ່ປະຖິ້ມສິ່ງເຫຼົ່ານີ້? ເມື່ອໄດ້ເຫັນຍຸກສະໄໝປ່ຽນແປງ, ຫຼາຍຄົນຈຶ່ງຂາດຄວາມຖ່ອມຕົວ ຫຼື ຄວາມອົດທົນ ແລະ ພວກເຂົາບໍ່ມີຄວາມຮັກ ຫຼື ຄຸນສົມບັດແບບນັກບຸນ. ຜູ້ຄົນເຫຼົ່ານີ້ຈັ່ງແມ່ນໄຮ້ສາລະ! ພວກເຂົາມີຄວາມເປັນມະນຸດປົກກະຕິຮອດໜຶ່ງຂີດຢູ່ບໍ? ພວກເຂົາມີຄຳພະຍານທີ່ຈະເວົ້າເຖິງບໍ? ພວກເຂົາບໍ່ມີຄວາມເຂົ້າໃຈທີ່ເລິກເຊິ່ງ ຫຼື ຄວາມຮູ້ສຶກໃດໆເລີຍ. ແນ່ນອນວ່າ ດ້ານການປະຕິບັດບາງຢ່າງຂອງຜູ້ຄົນທີ່ບິດເບືອນ ແລະ ຜິດພາດນັ້ນຕ້ອງໄດ້ຮັບການແກ້ໄຂ; ຍົກຕົວຢ່າງຄື ຊີວິດທາງຈິດວິນຍານທີ່ແຂງກະດ້າງໃນເມື່ອກ່ອນຂອງພວກເຂົາ ແລະ ຮູບຮ່າງພາຍນອກທີ່ກະດ້າງ ແລະ ບໍ່ສະຫຼາດຂອງພວກເຂົາ ເຊິ່ງທັງໝົດເຫຼົ່ານີ້ຕ້ອງໄດ້ປ່ຽນແປງ. ການປ່ຽນແປງບໍ່ໄດ້ໝາຍເຖິງການປ່ອຍໃຫ້ເຈົ້າເສເພ ຫຼື ເພີດເພີນຢູ່ກັບເນື້ອໜັງ ໂດຍເວົ້າໃນສິ່ງທີ່ເຈົ້າຕ້ອງການເວົ້າ. ເຈົ້າຕ້ອງບໍ່ເວົ້າແບບໂລເລ. ການມີຖ້ອຍຄຳ ແລະ ການປະພຶດຕົນແບບມະນຸດປົກກະຕິ ແມ່ນການເວົ້າແບບກົງໄປກົງມາ

ໂດຍເວົ້າວ່າ "ແມ່ນ" ເມື່ອເຈົ້າໝາຍຄວາມວ່າ "ແມ່ນ" ແລະ "ບໍ່" ເມື່ອເຈົ້າໝາຍຄວາມວ່າ "ບໍ່". ໃຫ້ຍຶດໝັ້ນໃນຄວາມເປັນຈິງ ແລະ ເວົ້າຢ່າງເໝາະສົມ. ບໍ່ໃຫ້ສໍ້ໂກງ, ບໍ່ຂີ້ຕົວະ. ຕ້ອງເຂົ້າໃຈຂໍ້ຈຳກັດທີ່ຄົນປົກກະຕິສາມາດບັນລຸໄດ້ໃນການປ່ຽນແປງອຸປະນິໄສ. ຖ້າບໍ່ເຊັ່ນນັ້ນ, ເຈົ້າຈະບໍ່ສາມາດເຂົ້າສູ່ຄວາມເປັນຈິງໄດ້.

# ຄວາມສຳຄັນຂອງການຊ່ວຍ ເຊື້ອສາຍຂອງໂມອາບໃຫ້ລອດພົ້ນ

ໃນສອງຫາສາມປີແຫ່ງພາລະກິດນີ້, ສິ່ງທີ່ຄວນຖືກເຮັດໃຫ້ບັນລຸໃນພາລະກິດແຫ່ງການພິພາກສາເຊິ່ງຖືກປະຕິບັດໃນພວກເຈົ້ານັ້ນ ໄດ້ຖືກເຮັດໃຫ້ບັນລຸໂດຍພື້ນຖານແລ້ວ. ຄົນສ່ວນໃຫຍ່ໄດ້ປະຖິ້ມຄວາມຄາດຫວັງບາງຢ່າງໃນອະນາຄົດ ແລະ ໂຊກຊະຕາຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ເມື່ອເວົ້າເຖິງວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ, ພວກເຈົ້າຫຼາຍຄົນກໍຮັບມັນບໍ່ໄດ້, ໃບໜ້າຂອງພວກເຈົ້າບູດ, ປາກຂອງພວກເຈົ້າບິດ ແລະ ຕາຂອງພວກເຈົ້າກໍຈ້ອງເບິ່ງ. ພວກເຈົ້າບໍ່ສາມາດເຊື່ອໄດ້ແທ້ວ່າພວກເຈົ້າເປັນເຊື້ອສາຍຂອງໂມອາບ. ໂມອາບຖືກເນລະເທດມາສູ່ດິນແດນນີ້ຫຼັງຈາກທີ່ຖືກສາບແຊ່ງ. ສາຍເລືອດຂອງລູກຫຼານຂອງໂມອາບແມ່ນຖືກສືບທອດມາຈົນເຖິງປັດຈຸບັນ ແລະ ພວກເຈົ້າກໍລ້ວນແລ້ວແຕ່ເປັນເຊື້ອສາຍຂອງໂມອາບ. ເຮົາບໍ່ສາມາດເຮັດຫຍັງໄດ້, ແລ້ວ ແມ່ນໃຜເຮັດໃຫ້ເຈົ້າເກີດໃນຄົວເຮືອນຂອງໂມອາບ? ເຮົາສົງສານເຈົ້າ ແລະ ບໍ່ປາຖະໜາຢາກໃຫ້ເຈົ້າເປັນແບບນີ້, ແຕ່ຜູ້ຄົນບໍ່ສາມາດປ່ຽນແປງຄວາມຈິງນີ້ໄດ້. ເຈົ້າເປັນເຊື້ອສາຍຂອງໂມອາບ ແລະ ເຮົາບໍ່ສາມາດເວົ້າວ່າ ເຈົ້າເປັນເຊື້ອສາຍຂອງເດວິດ. ບໍ່ວ່າເຈົ້າຈະເປັນເຊື້ອສາຍຂອງໃຜກໍຕາມ, ເຈົ້າກໍຍັງເປັນໜຶ່ງໃນສິ່ງທີ່ຖືກສ້າງ. ພຽງແຕ່ວ່າເຈົ້າເປັນສັດໂລກທີ່ມີຖານະຕໍ່າຕ້ອຍ, ເຈົ້າເປັນສັດໂລກທີ່ມີຕົ້ນກຳເນີດທີ່ຕໍ່າຕ້ອຍ. ສິ່ງຖືກສ້າງທັງໝົດຕ້ອງຜະເຊີນກັບພາລະກິດຂອງພຣະເຈົ້າ, ພວກເຂົາລ້ວນແລ້ວແຕ່ເປັນເປົ້າໝາຍແຫ່ງການເອົາຊະນະຂອງພຣະອົງ ແລະ ພວກເຂົາທຸກຄົນຕ້ອງເຫັນເຖິງອຸປະນິໄສທີ່ຊອບທຳຂອງພຣະອົງ ແລະ ຜະເຊີນກັບສະຕິປັນຍາ ແລະ ຄວາມຍິ່ງໃຫຍ່ຂອງພຣະອົງ. ໃນປັດຈຸບັນ ເຈົ້າເປັນເຊື້ອສາຍຂອງໂມອາບ ແລະ ເຈົ້າຕ້ອງຍອມຮັບເອົາການພິພາກສາ ແລະ ການຂ້ຽນຕີນີ້; ຖ້າເຈົ້າບໍ່ແມ່ນເຊື້ອສາຍຂອງໂມອາບ, ແລ້ວເຈົ້າຈະບໍ່ຕ້ອງການຮັບເອົາການພິພາກສາ ແລະ ຂ້ຽນຕີນີ້ບໍ? ເຈົ້າຄວນເຂົ້າໃຈສິ່ງນີ້! ຕາມຄວາມຈິງແລ້ວ, ການປະຕິບັດພາລະກິດໃນເຊື້ອສາຍຂອງໂມອາບໃນປັດຈຸບັນເປັນສິ່ງທີ່ມີຄ່າທີ່ສຸດ ແລະ ສຳຄັນທີ່ສຸດ. ຍ້ອນພາລະກິດຖືກປະຕິບັດໃນພວກເຈົ້າ, ມັນຈຶ່ງມີຄວາມສຳຄັນຢ່າງໃຫຍ່ຫຼວງ. ຖ້າພາລະກິດດັ່ງກ່າວຖືກປະຕິບັດໃນເຊື້ອສາຍຂອງຮາມ ມັນກໍຈະບໍ່ສຳຄັນ, ເພາະວ່າຕ່າງຈາກໂມອາບ ພວກເຂົາບໍ່ໄດ້ມາຈາກຕົ້ນກຳເນີດທີ່ຕໍ່າຕ້ອຍຂະໜາດນັ້ນ. ເຊື້ອສາຍຂອງລູກຊາຍຄົນທີສອງຂອງໂນອາ ນັ້ນກໍຄື ຮາມ ພຽງແຕ່ຖືກສາບແຊ່ງ, ພວກເຂົາບໍ່ໄດ້ມາຈາກການເຮັດຜິດປະເວນີ. ພຽງແຕ່ວ່າ ພວກເຂົາມາຈາກຖານະທີ່ຕໍ່າຕ້ອຍ, ເພາະໂນອາສາບແຊ່ງພວກເຂົາໃຫ້ເປັນຄົນຮັບໃຊ້ຂອງຄົນຮັບໃຊ້. ພວກເຂົາມີຖານະທີ່ຕໍ່າຕ້ອຍ, ແຕ່ຄຸນຄ່າເດີມຂອງພວກເຂົາກໍບໍ່ໄດ້ຕໍ່າຕ້ອຍ. ເມື່ອເວົ້າເຖິງໂມອາບ, ຜູ້ຄົນຮູ້ຈັກວ່າ ໂດຍດັ້ງເດີມແລ້ວ ລາວມີຖານະທີ່ຕໍ່າຕ້ອຍ ເພາະລາວເກີດຈາກການລ່ວງປະເວນີ. ເຖິງແມ່ນວ່າ ຖານະຂອງໂລດສູງສົ່ງຫຼາຍ, ໂມອາບມາຈາກໂລດ ແລະ ລູກສາວຂອງລາວ. ເຖິງແມ່ນວ່າ ໂລດຖືກເອີ້ນວ່າເປັນຄົນຊອບທຳ, ແຕ່ໂມອາບກໍຍັງຖືກສາບແຊ່ງຢູ່ດີ. ໂມອາບມີຄຸນຄ່າທີ່ຕໍ່າຕ້ອຍ ແລະ ມີຖານະທີ່ຕໍ່າຕ້ອຍ ແລະ ຖ້າແມ່ນວ່າລາວບໍ່ໄດ້ຖືກສາບແຊ່ງ ລາວກໍ

ຍັງຈະມີຄວາມສົກກະປົກ, ສະນັ້ນ ລາວຈຶ່ງແຕກຕ່າງຈາກຣາມ. ລາວບໍ່ໄດ້ຮັບຮູ້ພຣະເຢໂຮວາ, ແຕ່ກົງກັນຂ້າມຕໍ່ຕ້ານ ແລະ ກະບົດຕໍ່ພຣະເຢໂຮວາ, ສະນັ້ນ ລາວຈຶ່ງຕົກສູ່ສະຖານທີ່ງມືດມິດທີ່ສຸດ. ການປະຕິບັດພາລະກິດໃນເຊື້ອສາຍຂອງໂມອາບໃນປັດຈຸບັນແມ່ນການຊ່ວຍຄົນເຫຼົ່ານັ້ນທີ່ໄດ້ຕົກລົງສູ່ຄວາມມືດມິດທີ່ສຸດ. ເຖິງແມ່ນວ່າພວກເຂົາຖືກສາບແຊ່ງ, ພຣະເຈົ້າເຕັມໃຈທີ່ຈະຮັບເອົາສະຫງ່າລາສີຈາກພວກເຂົາ, ຍ້ອນວ່າ ໃນຕອນທຳອິດ ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ຂາດພຣະເຈົ້າໃນຫົວໃຈຂອງພວກເຂົາ; ພຽງແຕ່ການເຮັດໃຫ້ພວກເຂົາເຫຼົ່ານັ້ນທີ່ບໍ່ມີພຣະເຈົ້າຢູ່ໃນຫົວໃຈກາຍເປັນຄົນທີ່ເຊື່ອຟັງ ແລະ ຮັກພຣະເຈົ້າຄືການເອົາຊະນະທີ່ແທ້ຈິງ ແລະ ຜົນຂອງພາລະກິດດັ່ງກ່າວແມ່ນສິ່ງທີ່ມີຄ່າທີ່ສຸດ ແລະ ໜ້າເຊື່ອຖືທີ່ສຸດ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນການຮັບເອົາສະຫງ່າລາສີ, ນີ້ແມ່ນສະຫງ່າລາສີທີ່ພຣະເຈົ້າຕ້ອງການຮັບເອົາໃນຍຸກສຸດທ້າຍ. ເຖິງແມ່ນວ່າຄົນເຫຼົ່ານີ້ມີຖານະທີ່ຕໍ່າຕ້ອຍ ແລະ ບັດນີ້ ພວກເຂົາກໍສາມາດຮັບເອົາຄວາມລອດພົ້ນທີ່ຍິ່ງໃຫຍ່ດັ່ງກ່າວຄືການຍົກຂຶ້ນຂອງພຣະເຈົ້າຢ່າງແທ້ຈິງ. ພາລະກິດນີ້ມີຄວາມໝາຍຫຼາຍ ແລະ ພຣະອົງກໍຮັບເອົາຄົນເຫຼົ່ານີ້ຜ່ານການພິພາກສາ. ມັນບໍ່ແມ່ນເຈດຕະນາຂອງພຣະອົງທີ່ຈະລົງໂທດພວກເຂົາ, ແຕ່ເພື່ອຊ່ວຍເຫຼືອພວກເຂົາໃຫ້ລອດພົ້ນ. ຖ້າພຣະອົງຍັງປະຕິບັດພາລະກິດແຫ່ງການເອົາຊະນະໃນອິດສະຣາເອນໃນລະຫວ່າງຍຸກສຸດທ້າຍ ມັນກໍຈະບໍ່ມີຄ່າຫຍັງ; ເຖິງແມ່ນມັນຈະເກີດຜົນ, ມັນກໍຈະບໍ່ມີຄຸນຄ່າ ຫຼື ຄວາມສຳຄັນທີ່ຍິ່ງໃຫຍ່ໃດເລີຍ ແລະ ພຣະອົງຈະບໍ່ສາມາດຮັບເອົາສະຫງ່າລາສີທັງໝົດໄດ້. ພຣະອົງກຳລັງປະຕິບັດພາລະກິດໃນພວກເຈົ້າ ເຊິ່ງເປັນຄົນທີ່ໄດ້ຕົກຢູ່ໃນສະຖານທີ່ງມືດມິດທີ່ສຸດ, ເປັນຄົນທີ່ຫຼ້າຫຼັງທີ່ສຸດ. ຄົນເຫຼົ່ານີ້ບໍ່ຮັບຮູ້ວ່າມີພຣະເຈົ້າ ແລະ ບໍ່ເຄີຍຮູ້ຈັກວ່າມີພຣະເຈົ້າ. ສັດໂລກເຫຼົ່ານີ້ຖືກຊາຕານເຮັດໃຫ້ເສື່ອມຊາມຈົນເຖິງຈຸດທີ່ວ່າ ພວກເຂົາໄດ້ລືມພຣະເຈົ້າແລ້ວ. ພວກເຂົາຖືກຊາຕານເຮັດໃຫ້ຕາບອດ ແລະ ບໍ່ຮູ້ຈັກເລີຍວ່າ ມີພຣະເຈົ້າຢູ່ໃນສະຫວັນ. ໃນຫົວໃຈຂອງພວກເຈົ້າ, ພວກເຈົ້າລ້ວນແລ້ວແຕ່ບູຊາພະທຽມ ແລະ ບູຊາຊາຕານ, ພວກເຈົ້າບໍ່ແມ່ນຄົນທີ່ຕໍ່າຕ້ອຍທີ່ສຸດ ແລະ ຫຼ້າຫຼັງທີ່ສຸດບໍ? ພວກເຈົ້າມາຈາກເນື້ອໜັງທີ່ຕໍ່າຕ້ອຍທີ່ສຸດ ໂດຍປາສະຈາກອິດສະຫຼະສ່ວນຕົວ ແລະ ພວກເຈົ້າກໍທົນທຸກກັບຄວາມລຳບາກເຊັ່ນກັນ. ພວກເຈົ້າຍັງເປັນຄົນທີ່ຢູ່ໃນລະດັບຕໍ່າທີ່ສຸດໃນສັງຄົມນີ້ ໂດຍບໍ່ມີແມ່ນແຕ່ອິດສະຫຼະໃນດ້ານຄວາມເຊື່ອ. ນີ້ແມ່ນຄວາມສຳຄັນຂອງການປະຕິບັດພາລະກິດໃນພວກເຈົ້າ. ການປະຕິບັດພາລະກິດໃນພວກເຈົ້າໃນປັດຈຸບັນ ເຊິ່ງເປັນເຊື້ອສາຍຂອງໂມອາບ ບໍ່ແມ່ນການເຮັດໃຫ້ພວກເຈົ້າອັບອາຍໂດຍເຈດຕະນາ, ແຕ່ມັນແມ່ນເພື່ອເປີດເຜີຍຄວາມສຳຄັນຂອງພາລະກິດດັ່ງກ່າວ. ມັນຄືການຍົກຂຶ້ນທີ່ຍິ່ງໃຫຍ່ສຳລັບພວກເຈົ້າ. ຖ້າບຸກຄົນໜຶ່ງມີເຫດຜົນ ແລະ ຄວາມເຂົ້າໃຈ, ພວກເຂົາຈະເວົ້າວ່າ "ຂ້ານ້ອຍເປັນເຊື້ອສາຍຂອງໂມອາບ. ຂ້ານ້ອຍບໍ່ສົມຄວນສຳລັບການທີ່ຖືກພຣະເຈົ້າຍົກຂຶ້ນຢ່າງຍິ່ງໃຫຍ່ດັ່ງທີ່ຂ້ານ້ອຍໄດ້ຮັບໃນປັດຈຸບັນແທ້ໆ ຫຼື ບໍ່ສົມຄວນສຳລັບການອວຍພອນທີ່ຍິ່ງໃຫຍ່ດັ່ງກ່າວ. ໃນທຸກສິ່ງທີ່ຂ້ານ້ອຍເຮັດ ແລະ ເວົ້າ ແລະ ອີງຕາມສະຖານະ ແລະ ຄຸນຄ່າຂອງຂ້ານ້ອຍ, ຂ້ານ້ອຍບໍ່ເໝາະສົມສຳລັບການອວຍພອນທີ່ຍິ່ງໃຫຍ່ດັ່ງກ່າວຈາກພຣະເຈົ້າ. ຊາວອິດສະຣາເອນມີຄວາມຮັກທີ່ຍິ່ງໃຫຍ່ສຳລັບພຣະເຈົ້າ ແລະ ຄວາມເມດຕາທີ່ພວກເຂົາໄດ້ຮັບແມ່ນຖືກ

ປະທານໃຫ້ກັບພວກເຂົາໂດຍພຣະອົງ, ແຕ່ສະຖານະຂອງພວກເຂົາແມ່ນສູງສົ່ງກວ່າຂອງພວກຂ້ານ້ອຍຫຼາຍ. ອັບຣາຮາມອຸທິດຕົນຢ່າງຫຼາຍໃຫ້ກັບພຣະເຢໂຮວາ ແລະ ເປໂຕກໍອຸທິດຕົນຢ່າງຫຼາຍໃຫ້ກັບພຣະເຢຊູ, ການອຸທິດຂອງພວກເຂົາລື່ນພວກຂ້ານ້ອຍເປັນຮ້ອຍເທົ່າ. ອີງຕາມການກະທຳຂອງພວກຂ້ານ້ອຍ, ພວກຂ້ານ້ອຍແມ່ນບໍ່ສົມຄວນທີ່ຈະໄດ້ຮັບຄວາມເມດຕາຂອງພຣະເຈົ້າຢ່າງແນ່ນອນ". ການຮັບໃຊ້ຂອງຄົນເຫຼົ່ານີ້ໃນປະເທດຈີນບໍ່ສາມາດຖືກນຳມາຢູ່ຕໍ່ໜ້າພຣະເຈົ້າໄດ້ເລີຍ. ມັນເປັນຄວາມວຸ້ນວາຍທັງໝົດ; ໃນປັດຈຸບັນ ພວກເຈົ້າໄດ້ຮັບຄວາມເມດຕາຢ່າງຫຼວງຫຼາຍຈາກພຣະເຈົ້າກໍຍ້ອນການຍົກຂຶ້ນຂອງພຣະເຈົ້າເທົ່ານັ້ນ! ເມື່ອໃດແດ່ທີ່ພວກເຈົ້າໄດ້ສະແຫວງຫາພາລະກິດຂອງພຣະເຈົ້າ? ເມື່ອໃດແດ່ທີ່ພວກເຈົ້າໄດ້ເສຍສະຫຼະຊີວິດຂອງພວກເຈົ້າສຳລັບພຣະເຈົ້າ? ເມື່ອໃດແດ່ທີ່ພວກເຈົ້າພ້ອມທີ່ຈະມອບຄອບຄົວຂອງພວກເຈົ້າ, ພໍ່ແມ່ຂອງພວກເຈົ້າ ແລະ ລູກໆຂອງພວກເຈົ້າ? ບໍ່ມີໃຜໃນພວກເຈົ້າທີ່ໄດ້ຈ່າຍລາຄາອັນຍິ່ງໃຫຍ່! ຖ້າບໍ່ແມ່ນຍ້ອນພຣະວິນຍານບໍລິສຸດທີ່ນຳເຈົ້າອອກມາ, ມີຈັກຄົນໃນພວກເຈົ້າທີ່ຈະສາມາດເສຍສະຫຼະທຸກສິ່ງໄດ້? ມັນພຽງແຕ່ຍ້ອນພວກເຈົ້າໄດ້ຖືກບັງຄັບ ແລະ ຖືກຝືນໃຈຈຶ່ງເຮັດໃຫ້ພວກເຈົ້າຕິດຕາມຈົນເຖິງປັດຈຸບັນ. ການອຸທິດຂອງພວກເຈົ້າແມ່ນຢູ່ໃສ? ຄວາມເຊື່ອຟັງຂອງພວກເຈົ້າແມ່ນຢູ່ໃສ? ອີງຕາມການກະທຳຂອງພວກເຈົ້າ, ພວກເຈົ້າຄວນຖືກທຳລາຍແຕ່ດົນແລ້ວ, ພວກເຈົ້າທຸກຄົນຄວນຖືກກວາດລ້າງໃຫ້ສະອາດທັງໝົດ. ພວກເຈົ້າມີຄຸນສົມບັດຫຍັງທີ່ຈະໄດ້ຮັບການອວຍພອນທີ່ຍິ່ງໃຫຍ່ດັ່ງກ່າວ, ພວກເຈົ້າບໍ່ສົມຄວນຢ່າງແນ່ນອນ! ແມ່ນໃຜທ່າມກາງພວກເຈົ້າທີ່ພະຍາຍາມສ້າງເສັ້ນທາງຂອງເຂົາເອງແດ່? ແມ່ນໃຜທ່າມກາງພວກເຈົ້າທີ່ໄດ້ພົບຫົນທາງທີ່ແທ້ຈິງດ້ວຍຕົນເອງແດ່? ພວກເຈົ້າລ້ວນແລ້ວແຕ່ຂີ້ຄ້ານ ແລະ ໂລບມາກ, ເປັນຄົນໜ້າສົມເພດ ທີ່ສະແຫວງຫາແຕ່ຄວາມສຸກສະບາຍ! ພວກເຈົ້າຄິດວ່າ ພວກເຈົ້າຍິ່ງໃຫຍ່ບໍ? ພວກເຈົ້າມີຫຍັງແດ່ໃຫ້ໂອ້ອວດ? ເຖິງຈະບໍ່ສົນໃຈວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ, ທຳມະຊາດຂອງພວກເຈົ້າ ແລະ ບ່ອນເກີດຂອງພວກເຈົ້າສູງສົ່ງທີ່ສຸດບໍ? ເຖິງຈະບໍ່ສົນໃຈວ່າ ພວກເຈົ້າເປັນເຊື້ອສາຍຂອງລາວ, ແຕ່ເຖິງຢ່າງໃດພວກເຈົ້າທຸກຄົນກໍຍັງແມ່ນລູກຫຼານຂອງໂມອາບຢູ່ດີບໍ່ແມ່ນບໍ? ຄວາມເປັນຈິງໃນຂໍ້ແທ້ຈິງນີ້ສາມາດປ່ຽນແປງໄດ້ບໍ? ການເປີດໂປງທຳມະຊາດຂອງພວກເຈົ້າໃນປັດຈຸບັນຄັດຄ້ານກັບຄວາມເປັນຈິງໃນຂໍ້ແທ້ຈິງບໍ? ໃຫ້ເບິ່ງຄວາມເປັນທາດຂອງພວກເຈົ້າ, ຊີວິດຂອງພວກເຈົ້າ ແລະ ລັກສະນະຂອງພວກເຈົ້າ, ພວກເຈົ້າບໍ່ຮູ້ບໍວ່າ ພວກເຈົ້າເປັນສິ່ງທີ່ຕໍ່າຕ້ອຍທີ່ສຸດຂອງສິ່ງທີ່ຕໍ່າຕ້ອຍທ່າມກາງມະນຸດຊາດ? ພວກເຈົ້າມີຫຍັງແດ່ໃຫ້ໂອ້ອວດ? ໃຫ້ເບິ່ງຖານະຂອງພວກເຈົ້າໃນສັງຄົມ. ພວກເຈົ້າບໍ່ໄດ້ຢູ່ໃນລະດັບທີ່ຕໍ່າຕ້ອຍທີ່ສຸດບໍ? ພວກເຈົ້າຄິດວ່າ ເຮົາໄດ້ເວົ້າຜິດບໍ? ອັບຣາຮາມຖວາຍອີຊາກ. ພວກເຈົ້າໄດ້ຖວາຍຫຍັງແດ່? ໂຢບຖວາຍທຸກສິ່ງທຸກຢ່າງ. ພວກເຈົ້າໄດ້ຖວາຍຫຍັງແດ່? ມີຫຼາຍຄົນທີ່ໄດ້ມອບຊີວິດຂອງພວກເຂົາ, ກົ້ມຫົວພວກເຂົາລົງ, ຫຼັ່ງເລືອດຂອງພວກເຂົາເພື່ອສະແຫວງຫາຫົນທາງທີ່ແທ້ຈິງ. ພວກເຈົ້າໄດ້ຈ່າຍລາຄາດັ່ງກ່າວແລ້ວບໍ? ເມື່ອປຽບທຽບກັນແລ້ວພວກເຈົ້າບໍ່ມີຄຸນສົມບັດທີ່ຈະໄດ້ຮັບຄວາມເມດຕາທີ່ຍິ່ງໃຫຍ່ດັ່ງກ່າວເລີຍ, ແລ້ວມັນຜິດພວກເຈົ້າບໍທີ່ຈະເວົ້າໃນປັດຈຸບັນວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ? ຢ່າເຫັນຕົນເອງເປັນຄົນສູງສົ່ງ

ເກີນໄປ. ເຈົ້າບໍ່ໄດ້ມີຫຍັງໃຫ້ໂອ້ອວດ. ຄວາມລອດພົ້ນທີ່ຍິ່ງໃຫຍ່ດັ່ງກ່າວ, ຄວາມເມດຕາທີ່ຍິ່ງໃຫຍ່ດັ່ງກ່າວ ແມ່ນຖືກມອບໃຫ້ກັບພວກເຈົ້າລ້າໆ. ພວກເຈົ້າບໍ່ໄດ້ເສຍສະຫຼະຫຍັງເລີຍ, ແຕ່ໄດ້ຮັບຄວາມເມດຕາລ້າໆ. ພວກເຈົ້າບໍ່ຮູ້ສຶກອັບອາຍບໍ? ຫົນທາງທີ່ແທ້ຈິງນີ້ແມ່ນສິ່ງທີ່ເຈົ້າໄດ້ສະແຫວງຫາ ແລະ ຄົ້ນພົບດ້ວຍຕົນເອງບໍ? ບໍ່ແມ່ນພຣະວິນຍານບໍລິສຸດບໍທີ່ບັງຄັບໃຫ້ພວກເຈົ້າຍອມຮັບເອົາມັນ? ພວກເຈົ້າບໍ່ເຄີຍມີຫົວໃຈໃນການສະແຫວງຫາ ແລ້ວແຮງໄກທີ່ພວກເຈົ້າຈະມີຫົວໃຈໃນການຄົ້ນຫາ ແລະ ສະແຫວງຫາຄວາມຈິງ, ໃນການປາຖະໜາຫາຄວາມຈິງ. ພວກເຈົ້າພຽງແຕ່ນັ່ງລໍຖ້າຮັບເອົາມັນ; ພວກເຈົ້າໄດ້ຮັບຄວາມຈິງນີ້ໂດຍບໍ່ໄດ້ໃຊ້ຄວາມພະຍາຍາມຈັກໜ້ອຍເລີຍ. ພວກເຈົ້າມີສິດຫຍັງທີ່ຈະຕໍ່ວ່າ? ເຈົ້າຄິດວ່າເຈົ້າມີຄຸນຄ່າຫຼາຍທີ່ສຸດບໍ? ເມື່ອປຽບທຽບກັບຄົນທີ່ເສຍສະຫຼະຊີວິດຂອງພວກເຂົາ ແລະ ຫຼັ່ງເລືອດຂອງພວກເຂົາແລ້ວ, ເຈົ້າມີຫຍັງທີ່ຈະຕໍ່ວ່າ? ການທຳລາຍເຈົ້າໃນຕອນນີ້ຈະເປັນເລື່ອງທີ່ຖືກຕ້ອງ ແລະ ທຳມະຊາດຫຼາຍ! ນອກຈາກການເຊື່ອຟັງ ແລະ ການຕິດຕາມແລ້ວ, ເຈົ້າບໍ່ມີທາງເລືອກອື່ນອີກ. ເຈົ້າບໍ່ມີຄຸນຄ່າແທ້ໆ! ຄົນສ່ວນຫຼາຍທ່າມກາງພວກເຈົ້າຖືກເອີ້ນອອກມາ, ແຕ່ຖ້າສະພາບແວດລ້ອມບໍ່ໄດ້ບັງຄັບເຈົ້າ ຫຼື ຖ້າເຈົ້າບໍ່ໄດ້ຖືກເອີ້ນ, ເຈົ້າກໍຈະບໍ່ເຕັມໃຈອອກມາເລີຍ. ແມ່ນໃຜເຕັມໃຈທີ່ຈະປະຖິ້ມສິ່ງດັ່ງກ່າວນີ້? ແມ່ນໃຜເຕັມໃຈທີ່ຈະຍອມຖິ້ມຄວາມສຸກຂອງເນື້ອໜັງ? ພວກເຈົ້າລ້ວນແລ້ວແຕ່ເປັນຄົນທີ່ເພີດເພີນຢ່າງໂລບມາກໃນຄວາມສະບາຍ ແລະ ສະແຫວງຫາຊີວິດທີ່ຮັ່ງມີ! ເຈົ້າໄດ້ຮັບການອວຍພອນທີ່ຍິ່ງໃຫຍ່ດັ່ງກ່າວ, ເຈົ້າມີຫຍັງທີ່ຈະເວົ້າອີກ? ເຈົ້າມີຫຍັງທີ່ຈະຕໍ່ວ່າອີກ? ເຈົ້າໄດ້ຮັບການອວຍພອນທີ່ຍິ່ງໃຫຍ່ທີ່ສຸດ ແລະ ຄວາມເມດຕາທີ່ຍິ່ງໃຫຍ່ທີ່ສຸດໃນສະຫວັນ ແລະ ບັດນີ້ ພາລະກິດກໍຖືກເປີດເຜີຍຕໍ່ເຈົ້າ ເຊິ່ງບໍ່ເຄີຍເຮັດແບບນີ້ເທິງແຜ່ນດິນໂລກມາກ່ອນ. ນີ້ບໍ່ແມ່ນການອວຍພອນບໍ? ເພາະເຈົ້າໄດ້ຕໍ່ຕ້ານ ແລະ ກະບົດຕໍ່ພຣະເຈົ້າ, ເຈົ້າຈຶ່ງຖືກຂ້ຽນຕີຢ່າງໜັກໃນປັດຈຸບັນ. ຍ້ອນການຂ້ຽນຕີນີ້, ພວກເຈົ້າຈຶ່ງໄດ້ເຫັນຄວາມເມດຕາ ແລະ ຄວາມຮັກຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ພວກເຈົ້າກໍໄດ້ເຫັນຄວາມຊອບທຳ ແລະ ຄວາມບໍລິສຸດຂອງພຣະອົງ. ຍ້ອນການຂ້ຽນຕີນີ້ ແລະ ຍ້ອນຄວາມສົກກະປົກຂອງມະນຸດຊາດ, ພວກເຈົ້າຈຶ່ງໄດ້ເຫັນລິດອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າ ແລະ ພວກເຈົ້າໄດ້ເຫັນຄວາມບໍລິສຸດ ແລະ ຄວາມຍິ່ງໃຫຍ່ຂອງພຣະອົງ. ນີ້ບໍ່ແມ່ນຄວາມຈິງທີ່ຫາຍາກທີ່ສຸດບໍ? ນີ້ບໍ່ແມ່ນຊີວິດທີ່ມີຄວາມໝາຍບໍ? ພາລະກິດທີ່ພຣະເຈົ້າປະຕິບັດແມ່ນເຕັມໄປດ້ວຍຄວາມໝາຍ! ສະນັ້ນ ຍິ່ງຖານະຂອງພວກເຈົ້າຕໍ່າຕ້ອຍຫຼາຍສໍ່າໃດ, ມັນກໍຍິ່ງພິສູດວ່າພວກເຈົ້າຈະຖືກຍົກຂຶ້ນໂດຍພຣະເຈົ້າຫຼາຍສໍ່ານັ້ນ ແລະ ມັນກໍຍິ່ງພິສູດຄຸນຄ່າແຫ່ງພາລະກິດຂອງພຣະອົງໃນເຈົ້າໃນປັດຈຸບັນຫຼາຍສໍ່ານັ້ນ. ມັນເປັນສົມບັດທີ່ປະເມີນຄ່າບໍ່ໄດ້ແທ້ໆ! ມັນບໍ່ສາມາດໄປໃສໄດ້ອີກ! ຜ່ານຍຸກຕ່າງໆ ບໍ່ມີໃຜທີ່ຮັບຄວາມລອດພົ້ນທີ່ຍິ່ງໃຫຍ່ດັ່ງກ່າວ. ຄວາມຈິງທີ່ວ່າຖານະຂອງເຈົ້າຕໍ່າຕ້ອຍ ສະແດງໃຫ້ເຫັນວ່າ ຄວາມລອດພົ້ນຂອງພຣະເຈົ້າຍິ່ງໃຫຍ່ສໍ່າໃດ ແລະ ມັນສະແດງໃຫ້ເຫັນວ່າ ພຣະເຈົ້າຊື່ສັດກັບມະນຸດຊາດ, ພຣະອົງຊ່ວຍເຫຼືອ ບໍ່ແມ່ນທຳລາຍ.

ຄົນຈີນບໍ່ເຄີຍເຊື່ອໃນພຣະເຈົ້າ; ບໍ່ເຄີຍຮັບໃຊ້ພຣະເຢໂຮວາ ແລະ ບໍ່ເຄີຍຮັບໃຊ້ພຣະເຢຊູ. ພວກເຂົາໄດ້ແຕ່ຄູເຂົ່າ, ເຜົາທູບ, ເຜົາເຈ້ຍເງິນເຈ້ຍທອງ ແລະ ບູຊາພຣະພຸດທະເຈົ້າ. ພວກເຂົາບູຊາພະ

ທຽມເທົ່ານັ້ນ, ພວກເຂົາລ້ວນແລ້ວແຕ່ກະບົດຢ່າງໃຫຍ່ຫຼວງ, ສະນັ້ນ ຍິ່ງຖານະຂອງຜູ້ຄົນຕໍ່າຕ້ອຍສໍ່າໃດ, ມັນກໍຍິ່ງສະແດງໃຫ້ເຫັນວ່າ ສິ່ງທີ່ພຣະເຈົ້າໄດ້ຮັບຈາກພວກເຈົ້ານັ້ນຍິ່ງເປັນສະຫງ່າລາສີຫຼາຍຂຶ້ນ. ຈາກມຸມມອງຂອງບາງຄົນ, ພວກເຂົາຈະເວົ້າວ່າ "ພຣະເຈົ້າ, ແມ່ນຫຍັງຄືພາລະກິດທີ່ພຣະອົງປະຕິບັດ? ພຣະອົງ ຜູ້ເຊິ່ງເປັນພຣະເຈົ້າສູງສົ່ງ, ພຣະເຈົ້າທີ່ບໍລິສຸດ ໄດ້ມາເທິງດິນແດນທີ່ສົກກະປົກ? ພຣະອົງຄິດເລັກນ້ອຍກັບຕົວພຣະອົງເອງບໍ? ພວກຂ້ານ້ອຍສົກກະປົກຫຼາຍ, ແຕ່ພຣະອົງເຕັມໃຈທີ່ຈະຢູ່ກັບພວກຂ້ານ້ອຍບໍ? ພຣະອົງເຕັມໃຈທີ່ຈະດໍາລົງຊີວິດທ່າມກາງພວກຂ້ານ້ອຍບໍ? ພວກຂ້ານ້ອຍມີຖານະທີ່ຕໍ່າຕ້ອຍ, ແຕ່ພຣະອົງເຕັມໃຈທີ່ຈະເຮັດໃຫ້ພວກຂ້ານ້ອຍສົມບູນບໍ? ແລ້ວພຣະອົງຈະໃຊ້ພວກຂ້ານ້ອຍໃຫ້ເປັນຕົວຢ່າງ ແລະ ແບບຢ່າງບໍ?" ເຮົາເວົ້າວ່າ: ເຈົ້າບໍ່ເຂົ້າໃຈຄວາມປະສົງຂອງເຮົາ. ເຈົ້າບໍ່ເຂົ້າໃຈພາລະກິດທີ່ເຮົາຕ້ອງການປະຕິບັດ ຫຼື ເຈົ້າບໍ່ເຂົ້າໃຈອຸປະນິໄສຂອງເຮົາ. ເຈົ້າບໍ່ສາມາດຢັ່ງເຖິງຄວາມສໍາຄັນຂອງພາລະກິດທີ່ເຮົາກໍາລັງຈະເຮັດ. ພາລະກິດຂອງເຮົາຈະສອດຄ່ອງກັບແນວຄິດຂອງມະນຸດໄດ້ບໍ? ອີງຕາມແນວຄິດຂອງມະນຸດ, ເຮົາຈະຕ້ອງເກີດໃນປະເທດທີ່ດີເພື່ອສະແດງໃຫ້ເຫັນວ່າ ເຮົາມີຖານະສູງສົ່ງ, ເພື່ອສະແດງໃຫ້ເຫັນວ່າເຮົາມີຄຸນຄ່າທີ່ຍິ່ງໃຫຍ່ ແລະ ເພື່ອສະແດງໃຫ້ເຫັນຄວາມເປັນຕາເຄົາລົບ, ຄວາມບໍລິສຸດ ແລະ ຄວາມຍິ່ງໃຫຍ່ຂອງເຮົາ. ຖ້າເຮົາເກີດໃນສະຖານທີ່ໆຮູ້ຈັກເຮົາ, ໃນຄອບຄົວທີ່ມີຖານະສູງ ແລະ ຖ້າເຮົາມີຕໍາແໜ່ງ ແລະ ສະຖານະທີ່ສູງ, ແລ້ວເຮົາກໍຈະຖືກປະຕິບັດນໍາຢ່າງດີ. ສິ່ງນັ້ນຈະບໍ່ສົ່ງຜົນປະໂຫຍດໃຫ້ກັບພາລະກິດຂອງເຮົາ, ແລ້ວຄວາມລອດພົ້ນທີ່ຍິ່ງໃຫຍ່ດັ່ງກ່າວຈະສາມາດຖືກເປີດເຜີຍໄດ້ບໍ? ທຸກຄົນທີ່ເຫັນເຮົາຈະເຊື່ອຟັງເຮົາ ແລະ ພວກເຂົາຈະບໍ່ຖືກເຮັດໃຫ້ເປິເປື້ອນດ້ວຍຄວາມສົກກະປົກ. ເຮົາຄວນເກີດໃນສະຖານທີ່ແບບນີ້. ນີ້ແມ່ນສິ່ງທີ່ພວກເຈົ້າຄິດ. ແຕ່ໃຫ້ຄິດກ່ຽວກັບສິ່ງນີ້ເບິ່ງ ພຣະເຈົ້າໄດ້ມາເທິງແຜ່ນດິນໂລກເພື່ອຄວາມສຸກບໍ ຫຼື ເພື່ອພາລະກິດ? ຖ້າເຮົາປະຕິບັດພາລະກິດໃນສະຖານທີ່ໆງ່າຍດາຍ ແລະ ສະດວກສະບາຍ, ເຮົາຈະສາມາດເອົາສະຫງ່າລາສີຂອງເຮົາຢ່າງສົມບູນໄດ້ບໍ? ເຮົາຈະສາມາດເອົາຊະນະສິ່ງຊົງສ້າງທຸກຢ່າງຂອງເຮົາໄດ້ບໍ? ເມື່ອພຣະເຈົ້າມາເຖິງແຜ່ນດິນໂລກ ພຣະອົງບໍ່ໄດ້ມາຈາກໂລກ ແລະ ພຣະອົງບໍ່ໄດ້ກາຍມາເປັນເນື້ອໜັງເພື່ອເພີດເພີນກັບໂລກ. ສະຖານທີ່ໆການປະຕິບັດພາລະກິດຈະເປີດເຜີຍອຸປະນິໄສຂອງພຣະອົງ ແລະ ມີຄວາມໝາຍທີ່ສຸດກໍຄືສະຖານທີ່ໆພຣະອົງກໍາເນີດ. ບໍ່ວ່າມັນຈະເປັນດິນແດນທີ່ບໍລິສຸດ ຫຼື ສົກກະປົກ ແລະ ບໍ່ວ່າພຣະອົງຈະປະຕິບັດພາລະກິດຢູ່ໃສ, ພຣະອົງກໍບໍລິສຸດ. ທຸກສິ່ງໃນແຜ່ນດິນໂລກຖືກສ້າງໂດຍພຣະອົງ; ພຽງແຕ່ວ່າທຸກສິ່ງຖືກຊາຕານເຮັດໃຫ້ເສື່ອມຊາມເທົ່ານັ້ນ. ເຖິງຢ່າງໃດກໍຕາມ, ທຸກສິ່ງກໍຍັງເປັນຂອງພຣະອົງ; ພວກມັນລ້ວນແລ້ວແຕ່ຢູ່ໃນມືຂອງພຣະອົງ. ພຣະອົງມາສູ່ດິນແດນທີ່ສົກກະປົກ ແລະ ປະຕິບັດພາລະກິດເພື່ອເປີດເຜີຍຄວາມບໍລິສຸດຂອງພຣະອົງ; ພຣະອົງພຽງເຮັດສິ່ງນີ້ເພື່ອເຫັນແກ່ພາລະກິດຂອງພຣະອົງ ນັ້ນກໍຄື ພຣະອົງອົດກັ້ນຕໍ່ຄວາມອັບອາຍຢ່າງຫຼວງຫຼາຍເພື່ອປະຕິບັດພາລະກິດແບບນີ້ໃນການຊ່ວຍຜູ້ຄົນໃຫ້ລອດພົ້ນໃນດິນແດນທີ່ສົກກະປົກນີ້. ການເຮັດແບບນີ້ກໍເພື່ອເປັນພະຍານໃຫ້ກັບມະນຸດຊາດທັງປວງ. ສິ່ງທີ່ພາລະກິດດັ່ງກ່າວສະແດງໃຫ້ຜູ້ຄົນເຫັນກໍຄືອຸປະນິໄສຂອງພຣະເຈົ້າ ແລະ ມັນຍັງສາມາດສະແດງເຖິງຄວາມເລີດລໍ້າຂອງພຣະເຈົ້າໄດ້

ດີກວ່າ. ຄວາມຍິ່ງໃຫຍ່ ແລະ ຄວາມທ່ຽງທຳຂອງພຣະອົງຖືກສະແດງຜ່ານຄວາມລອດພົ້ນຂອງກຸ່ມຄົນທີ່ຕໍ່າຕ້ອຍທີ່ຄົນອື່ນລັງກຽດ. ການເກີດໃນດິນແດນທີ່ສົກກະປົກບໍ່ໄດ້ພິສູດເລີຍວ່າພຣະອົງຕໍ່າຕ້ອຍ; ມັນພຽງແຕ່ເຮັດໃຫ້ສິ່ງຊົງສ້າງທັງໝົດຂອງພຣະອົງໄດ້ເຫັນເຖິງຄວາມຍິ່ງໃຫຍ່ ແລະ ຄວາມຮັກທີ່ແທ້ຈິງທີ່ພຣະອົງມີໃຫ້ກັບມະນຸດຊາດ. ຍິ່ງພຣະອົງເຮັດແບບນີ້, ມັນຍິ່ງເປີດເຜີຍເຖິງຄວາມຮັກທີ່ບໍລິສຸດ ແລະ ຄວາມຮັກທີ່ບໍ່ມີຂໍ້ບົກຜ່ອງຂອງພຣະອົງທີ່ມີຕໍ່ມະນຸດຊາດ. ພຣະເຈົ້າບໍລິສຸດ ແລະ ຊອບທຳ. ເຖິງແມ່ນພຣະອົງເກີດໃນດິນແດນທີ່ສົກກະປົກ ແລະ ເຖິງແມ່ນພຣະອົງດຳລົງຊີວິດກັບຄົນທີ່ເຕັມໄປດ້ວຍຄວາມສົກກະປົກ ເໝືອນກັບທີ່ພຣະເຢຊູດຳລົງຊີວິດກັບຄົນບາບໃນຍຸກແຫ່ງພຣະຄຸນ, ພາລະກິດທັງໝົດຂອງພຣະອົງບໍ່ແມ່ນເພື່ອຄວາມຢູ່ລອດຂອງມວນມະນຸດຊາດບໍ? ມັນບໍ່ໄດ້ເປັນແບບນັ້ນເພື່ອມະນຸດຊາດຈະສາມາດຮັບເອົາຄວາມລອດພົ້ນທີ່ຍິ່ງໃຫຍ່ບໍ? ສອງພັນປີກ່ອນ ພຣະອົງດຳລົງຊີວິດກັບຄົນບາບເປັນເວລາຫຼາຍປີ. ນັ້ນກໍເພື່ອການໄຖ່ບາບ. ໃນປັດຈຸບັນ, ພຣະອົງດຳລົງຊີວິດກັບກຸ່ມຄົນທີ່ສົກກະປົກ ແລະ ຕໍ່າຕ້ອຍ. ນີ້ແມ່ນເພື່ອຄວາມລອດພົ້ນ. ພາລະກິດທັງໝົດບໍ່ແມ່ນເພື່ອພວກເຈົ້າ, ມະນຸດທັງຫຼາຍບໍ? ຖ້າມັນບໍ່ແມ່ນເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ, ເປັນຫຍັງພຣະອົງຈຶ່ງດຳລົງຊີວິດ ແລະ ທົນທຸກກັບຄົນບາບເປັນເວລາຫຼາຍປີຫຼັງຈາກທີ່ເກີດໃນຮາງຫຍ້າ? ແລ້ວຖ້າບໍ່ແມ່ນເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ, ເປັນຫຍັງພຣະອົງຈຶ່ງກັບຄືນມາເປັນເນື້ອໜັງເປັນຄັ້ງທີສອງ, ເກີດໃນດິນແດນນີ້ທີ່ເຕັມໄປດ້ວຍຜີຮ້າຍຊຸມນຸມກັນ ແລະ ດຳລົງຊີວິດກັບຄົນທີ່ຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮຸນແຮງ? ພຣະເຈົ້າບໍ່ຊື່ສັດບໍ? ມີພາລະກິດໃດແດ່ຂອງພຣະອົງທີ່ບໍ່ແມ່ນເພື່ອມະນຸດຊາດ? ມີພາລະກິດໃດທີ່ບໍ່ແມ່ນເພື່ອໂຊກຊະຕາຂອງພວກເຈົ້າ? ພຣະເຈົ້າບໍລິສຸດ. ສິ່ງນີ້ປ່ຽນແປງບໍ່ໄດ້! ພຣະອົງບໍ່ໄດ້ຖືກເຮັດໃຫ້ເປິເປື້ອນໂດຍຄວາມສົກກະປົກ ເຖິງແມ່ນພຣະອົງໄດ້ມາສູ່ດິນແດນທີ່ສົກກະປົກ; ທຸກສິ່ງເຫຼົ່ານີ້ພຽງແຕ່ໝາຍຄວາມວ່າ ຄວາມຮັກຂອງພຣະເຈົ້າສຳລັບມະນຸດຊາດແມ່ນບໍ່ເຫັນແກ່ຕົວເລີຍ, ການທົນທຸກ ແລະ ຄວາມອັບອາຍທີ່ພຣະອົງອົດກັ້ນກໍຍິ່ງໃຫຍ່ຫຼາຍ! ພວກເຈົ້າບໍ່ຮູ້ບໍວ່າພຣະອົງທົນທຸກກັບຄວາມອັບອາຍຢ່າງໃຫຍ່ຫຼວງເພື່ອພວກເຈົ້າທຸກຄົນ ແລະ ເພື່ອໂຊກຊະຕາຂອງພວກເຈົ້າ? ແທນທີ່ພຣະອົງຈະຊ່ວຍເຫຼືອຜູ້ຄົນທີ່ຍິ່ງໃຫຍ່ ຫຼື ລູກຊາຍຂອງຄອບຄົວທີ່ຮັ່ງມີ ແລະ ມີອຳນາດ, ແຕ່ພຣະອົງເນັ້ນຊ່ວຍເຫຼືອຄົນທີ່ຕໍ່າຕ້ອຍ ແລະ ຄົນທີ່ຖືກຄົນອື່ນດູຖູກ. ທຸກສິ່ງເຫຼົ່ານີ້ບໍ່ແມ່ນຄວາມບໍລິສຸດຂອງພຣະອົງບໍ? ທຸກສິ່ງເຫຼົ່ານີ້ບໍ່ແມ່ນຄວາມຊອບທຳຂອງພຣະອົງບໍ? ພຣະອົງຈະເລືອກເກີດໃນດິນແດນທີ່ສົກກະປົກ ແລະ ທົນທຸກກັບຄວາມອັບອາຍທັງໝົດເພື່ອເຫັນແກ່ຄວາມຢູ່ລອດຂອງມະນຸດຊາດ. ພຣະເຈົ້າເປັນຈິງຫຼາຍ, ພຣະອົງບໍ່ປະຕິບັດພາລະກິດທີ່ບໍ່ເປັນຈິງ. ພາລະກິດທຸກຂັ້ນຕອນຂອງພຣະອົງບໍ່ໄດ້ຮັບການປະຕິບັດຕາມຕົວຈິງບໍ? ເຖິງແມ່ນຜູ້ຄົນລ້ວນແລ້ວແຕ່ໃສ່ຮ້າຍພຣະອົງ ແລະ ເວົ້າວ່າພຣະອົງນັ່ງຮ່ວມໂຕະກັບຄົນບາບ, ເຖິງແມ່ນຜູ້ຄົນລ້ວນແລ້ວແຕ່ເຍາະເຍີ້ຍພຣະອົງ ແລະ ເວົ້າວ່າພຣະອົງດຳລົງຊີວິດຮ່ວມກັບລູກຊາຍແຫ່ງຄວາມສົກກະປົກ, ວ່າພຣະອົງດຳລົງຊີວິດຢູ່ກັບຄົນທີ່ຕໍ່າຕ້ອຍທີ່ສຸດ, ພຣະອົງກໍຍັງອຸທິດຕົນເອງຢ່າງບໍ່ເຫັນແກ່ຕົວ ແລະ ເຖິງຢ່າງນັ້ນພຣະອົງກໍຍັງຖືກປະຕິເສດໃນທ່າມກາງມະນຸດຊາດ. ການທົນທຸກທີ່ພຣະອົງໄດ້ຮັບບໍ່ຫຼາຍກວ່າຂອງພວກເຈົ້າບໍ? ພາລະກິດຂອງ

ພຣະອົງບໍ່ໄດ້ມີຫຼາຍກວ່າລາຄາທີ່ພວກເຈົ້າໄດ້ຈ່າຍບໍ? ພວກເຈົ້າເກີດໃນດິນແດນທີ່ສົກກະປົກ ແຕ່ພວກເຈົ້າໄດ້ຮັບເອົາຄວາມບໍລິສຸດຂອງພຣະເຈົ້າ. ພວກເຈົ້າເກີດໃນດິນແດນທີ່ຜີຮ້າຍຊຸມນຸມກັນ ແຕ່ພວກເຈົ້າໄດ້ຮັບການປົກປ້ອງທີ່ຍິ່ງໃຫຍ່. ພວກເຈົ້າມີທາງເລືອກຫຍັງອີກແດ່? ພວກເຈົ້າມີການຕໍ່ວ່າຫຍັງ? ການທົນທຸກທີ່ພຣະອົງໄດ້ຮັບບໍ່ໄດ້ຫຼາຍກວ່າຄວາມທົນທຸກທີ່ພວກເຈົ້າໄດ້ຮັບບໍ? ພຣະອົງໄດ້ມາເທິງແຜ່ນດິນໂລກ ແລະ ບໍ່ເຄີຍໄດ້ຮັບຄວາມສຸກໃນໂລກຂອງມະນຸດຈັກເທື່ອ. ພຣະອົງລັງກຽດສິ່ງເຫຼົ່ານັ້ນ. ພຣະເຈົ້າບໍ່ໄດ້ມາເທິງແຜ່ນດິນໂລກເພື່ອມີຄວາມສຸກກັບຜົນປະໂຫຍດທາງວັດຖຸຈາກມະນຸດ ຫຼື ມັນບໍ່ແມ່ນເພື່ອມີຄວາມສຸກກັບການກິນ, ນຸ່ງຫົ່ມ ແລະ ການຕົກແຕ່ງຈາກມະນຸດ. ພຣະອົງບໍ່ໃສ່ໃຈຕໍ່ສິ່ງເຫຼົ່ານີ້, ພຣະອົງມາເທິງແຜ່ນດິນໂລກເພື່ອທົນທຸກສຳລັບມະນຸດ ບໍ່ແມ່ນເພື່ອມີຄວາມສຸກກັບໂຊກລາບເທິງແຜ່ນດິນໂລກ. ພຣະອົງມາເພື່ອທົນທຸກ, ພຣະອົງມາເພື່ອປະຕິບັດພາລະກິດ ແລະ ເພື່ອເຮັດແຜນການຄຸ້ມຄອງຂອງພຣະອົງໃຫ້ສຳເລັດ. ພຣະອົງບໍ່ໄດ້ເລືອກເອົາສະຖານທີ່ງາມ, ເພື່ອດຳລົງຊີວິດໃນສະຖານທີ່ຫຼູຫຼາ ຫຼື ໂຮງແຮມຫຼູຫຼາ ຫຼື ພຣະອົງບໍ່ໄດ້ມີຄົນຮັບໃຊ້ຈຳນວນຫຼວງຫຼາຍເພື່ອຮັບໃຊ້ພຣະອົງ. ອີງຕາມສິ່ງທີ່ພວກເຈົ້າໄດ້ເຫັນ, ພວກເຈົ້າບໍ່ຮູ້ບໍວ່າ ພຣະອົງມາເພື່ອປະຕິບັດພາລະກິດ ຫຼື ເພື່ອຄວາມສຸກສະບາຍ? ຕາຂອງພວກເຈົ້າບໍ່ໄດ້ເຫັນບໍ? ພຣະອົງໄດ້ມອບໃຫ້ພວກເຈົ້າຫຼາຍສໍ່າໃດ? ຖ້າພຣະອົງເກີດໃນສະຖານທີ່ງາມສະບາຍ ພຣະອົງຈະສາມາດຮັບເອົາສະຫງ່າລາສີໄດ້ບໍ? ພຣະອົງຈະສາມາດປະຕິບັດພາລະກິດໄດ້ບໍ? ການກະທຳແບບນັ້ນຂອງພຣະອົງຈະມີຄວາມໝາຍໃດບໍ? ພຣະອົງຈະສາມາດເອົາຊະນະມະນຸດຊາດທັງໝົດໄດ້ບໍ? ພຣະອົງຈະສາມາດຊ່ວຍເຫຼືອຄົນຈາກດິນແດນແຫ່ງຄວາມສົກກະປົກໄດ້ບໍ? ອີງຕາມແນວຄິດຂອງຜູ້ຄົນ, ພວກເຂົາຖາມວ່າ: "ໃນເມື່ອພຣະເຈົ້າບໍລິສຸດ, ແລ້ວເປັນຫຍັງພຣະອົງຈຶ່ງເກີດໃນສະຖານທີ່ງາມສົກກະປົກຂອງພວກຂ້ານ້ອຍ? ພຣະອົງກຽດຊັງ ແລະ ລັງກຽດພວກຂ້ານ້ອຍທີ່ເປັນມະນຸດສົກກະປົກ; ພຣະອົງລັງກຽດການຕໍ່ຕ້ານຂອງພວກຂ້ານ້ອຍ ແລະ ຄວາມກະບົດຂອງພວກຂ້ານ້ອຍ, ແລ້ວເປັນຫຍັງພຣະອົງຈຶ່ງດຳລົງຊີວິດກັບພວກຂ້ານ້ອຍ? ພຣະອົງເປັນພຣະເຈົ້າທີ່ຍິ່ງໃຫຍ່ຫຼາຍ, ພຣະອົງສາມາດເກີດຢູ່ບ່ອນໃດກໍໄດ້, ແລ້ວເປັນຫຍັງພຣະອົງຕ້ອງມາເກີດໃນດິນແດນທີ່ສົກກະປົກນີ້? ພຣະອົງຂ້ຽນຕີ ແລະ ພິພາກສາພວກຂ້ານ້ອຍທຸກໆມື້ ແລະ ພຣະອົງຮູ້ຢ່າງຊັດເຈນວ່າ ພວກຂ້ານ້ອຍເປັນເຊື້ອສາຍຂອງໂມອາບ, ແລ້ວເປັນຫຍັງພຣະອົງຈຶ່ງຍັງດຳລົງຊີວິດທ່າມກາງພວກຂ້ານ້ອຍ? ເປັນຫຍັງພຣະອົງຈຶ່ງເກີດໃນຄອບຄົວທີ່ເປັນເຊື້ອສາຍຂອງໂມອາບ? ເປັນຫຍັງພຣະອົງຈຶ່ງເຮັດແບບນັ້ນ?" ຄວາມເຂົ້າໃຈແບບນີ້ຂອງພວກເຈົ້າແມ່ນຂາດເຫດຜົນຫຼາຍ! ມັນເປັນພາລະກິດປະເພດນີ້ເທົ່ານັ້ນທີ່ເຮັດໃຫ້ຜູ້ຄົນເຫັນເຖິງຄວາມຍິ່ງໃຫຍ່ຂອງພຣະອົງ, ຄວາມຖ່ອມຕົວ ແລະ ຄວາມລີ້ລັບຂອງພຣະອົງ. ພຣະອົງເຕັມໃຈທີ່ຈະເສຍສະຫຼະທຸກສິ່ງເພື່ອເຫັນແກ່ພາລະກິດຂອງພຣະອົງ ແລະ ພຣະອົງໄດ້ອົດກັ້ນຕໍ່ການທົນທຸກໆຢ່າງເພື່ອພາລະກິດຂອງພຣະອົງ. ພຣະອົງເຮັດແບບນັ້ນກໍເພື່ອເຫັນແກ່ມະນຸດຊາດ ແລະ ຍິ່ງໄປກວ່ານັ້ນກໍຄືເພື່ອເອົາຊະນະຊາຕານ ເພື່ອສັດໂລກທັງປວງຈະຍອມຢູ່ພາຍໃຕ້ອຳນາດຂອງພຣະອົງ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງເປັນພາລະກິດທີ່ມີຄວາມໝາຍ ແລະ ມີຄຸນຄ່າ. ຖ້າເຊື້ອສາຍຂອງຢາໂຄບເກີດໃນປະເທດຈີນ, ໃນຜືນແຜ່ນດິນນີ້ ແລະ ພວກເຂົາ

ເປັນພວກເຈົ້າທັງໝົດ, ແລ້ວແມ່ນຫຍັງຈະເປັນຄວາມສຳຄັນຂອງພາລະກິດທີ່ປະຕິບັດໃນພວກເຈົ້າ? ຊາຕານຈະເວົ້າຫຍັງ? ຊາຕານຈະເວົ້າວ່າ “ພວກເຂົາເຄີຍຢ້ານພຣະອົງມາກ່ອນ, ພວກເຂົາເຊື່ອຟັງພຣະອົງຕັ້ງແຕ່ຕອນເລີ່ມຕົ້ນ ແລະ ພວກເຂົາບໍ່ມີປະຫວັດໃນການທັກທ້ຽງພຣະອົງ. ພວກເຂົາບໍ່ແມ່ນມະນຸດຊາດທີ່ມືດມົດທີ່ສຸດ, ຕໍ່າຕ້ອຍທີ່ສຸດ ຫຼື ຫຼ້າຫຼັງທີ່ສຸດ”. ຖ້າພາລະກິດຖືກປະຕິບັດໃນລັກສະນະນີ້ແທ້ໆ, ແມ່ນໃຜຈະໝັ້ນໃຈໃນພາລະກິດນີ້? ຈາກຈັກກະວານທັງປວງ, ຄົນຈີນເປັນຄົນທີ່ຫຼ້າຫຼັງທີ່ສຸດ. ພວກເຂົາເກີດຢ່າງຕໍ່າຕ້ອຍພ້ອມກັບຄວາມຊື່ສັດທີ່ຕໍ່າ, ພວກເຂົາເປັນຄົນທີ່ໂງ່ ແລະ ດ້ານຊາ ແລະ ພວກເຂົາຫຍາບຄາຍ ແລະ ເສື່ອມໂຊມ. ພວກເຂົາຖືກຊຶມຊັບໄປດ້ວຍອຸປະນິໄສຊົ່ວຮ້າຍ, ສົກກະປົກ ແລະ ໄຮ້ສິນທຳ. ພວກເຈົ້າມີອຸປະນິໄສແບບຊາຕານສິ່ງເຫຼົ່ານີ້ທັງໝົດ. ຫຼັງຈາກທີ່ພາລະກິດນີ້ຖືກເຮັດໃຫ້ສຳເລັດ ຜູ້ຄົນຈະໂຍນຖິ້ມອຸປະນິໄສອັນເສື່ອມຊາມເຫຼົ່ານີ້ ແລະ ຈະສາມາດເຊື່ອຟັງຢ່າງສົມບູນ ແລະ ຖືກເຮັດໃຫ້ບໍລິບູນ. ມີພຽງແຕ່ຜົນຈາກພາລະກິດປະເພດນີ້ຈຶ່ງເປັນຄຳພະຍານທ່າມກາງການເນລະມິດສ້າງ! ເຈົ້າເຂົ້າໃຈບໍວ່າແມ່ນຫຍັງຄືຄຳພະຍານ? ຄຳພະຍານຄວນເກີດຂຶ້ນໄດ້ແນວໃດແທ້? ພາລະກິດປະເພດນີ້ເຮັດໃຫ້ພວກເຈົ້າກາຍມາເປັນຜູ້ປະກອບພ້ອມກັບເປັນເຄື່ອງມືຮັບໃຊ້; ຍິ່ງໄປກວ່ານັ້ນມັນໄດ້ເຮັດໃຫ້ພວກເຈົ້າກາຍມາເປັນເປົ້າໝາຍຂອງຄວາມລອດພົ້ນ. ໃນປັດຈຸບັນ ພວກເຈົ້າເປັນຜູ້ຄົນຂອງພຣະເຈົ້າ ແລະ ຕໍ່ໄປ ພວກເຈົ້າກໍຈະເປັນແບບຢ່າງ ແລະ ຕົວຢ່າງ. ໃນພາລະກິດນີ້, ພວກເຈົ້າຮັບບົດບາດທີ່ຫຼາກຫຼາຍປະເພດ ແລະ ໃນທີ່ສຸດແລ້ວ ພວກເຈົ້າຈະເປັນເປົ້າໝາຍຂອງຄວາມລອດພົ້ນ. ຫຼາຍຄົນຢູ່ໃນດ້ານລົບຍ້ອນສິ່ງນີ້; ພວກເຂົາບໍ່ໄດ້ຕາບອດແທ້ໆບໍ? ເຈົ້າບໍ່ສາມາດເຫັນຫຍັງໄດ້ຢ່າງຈະແຈ້ງ! ພຽງແຕ່ເອີ້ນເຈົ້າກໍເຮັດໃຫ້ເຈົ້າຍອມຈຳນົນແລ້ວບໍ? ເຈົ້າເຂົ້າໃຈບໍວ່າ ອຸປະນິໄສທີ່ຊອບທຳຂອງພຣະເຈົ້າໝາຍເຖິງຫຍັງ? ເຈົ້າເຂົ້າໃຈບໍວ່າຄວາມລອດພົ້ນຂອງພຣະອົງແມ່ນຫຍັງ? ເຈົ້າເຂົ້າໃຈບໍວ່າຄວາມຮັກຂອງພຣະເຈົ້າແມ່ນຫຍັງ? ເຈົ້າບໍ່ມີຄວາມຊື່ສັດ! ເມື່ອເອີ່ຍເຖິງຢ່າງຈົບງາມ ເຈົ້າກໍມີຄວາມສຸກ. ເມື່ອເອີ່ຍເຖິງແບບບໍ່ດີ ເຈົ້າກໍບໍ່ເຕັມໃຈ ແລະ ທໍ້ຖອຍ. ເຈົ້າເປັນຫຍັງ? ເຈົ້າບໍ່ໄດ້ສະແຫວງຫາຫົນທາງທີ່ແທ້ຈິງ! ເຈົ້າຄວນຢຸດສະແຫວງຫາໂດຍໄວ. ມັນເປັນຕາອັບອາຍ! ສິ່ງທີ່ບໍ່ສຳຄັນແບບນີ້ໄດ້ເຮັດໃຫ້ເຈົ້າຍອມຈຳນົນ, ນີ້ບໍ່ແມ່ນສັນຍາລັກແຫ່ງຄວາມອັບອາຍບໍ?

ເຈົ້າຄວນມີຄວາມຮູ້ກ່ຽວກັບຕົນເອງເລັກນ້ອຍ. ຢ່າເບິ່ງຕົນເອງສູງສົ່ງເກີນໄປ ແລະ ຢ່າຝັນທີ່ຈະໄດ້ໄປສະຫວັນ. ພຽງແຕ່ສະແຫວງຫາຢ່າງຕັ້ງໜ້າເພື່ອຖືກເອົາຊະນະເທິງແຜ່ນໂລກ. ຢ່າຄິດເຖິງຄວາມຝັນທີ່ບໍ່ເປັນຈິງເຫຼົ່ານັ້ນທີ່ບໍ່ມີຢູ່ຈິງ! ຖ້າມີຄົນເວົ້າບາງສິ່ງດັ່ງຕໍ່ໄປນີ້ ເຊິ່ງສິ່ງເຫຼົ່ານີ້ແມ່ນຄຳເວົ້າຈາກຄົນທີ່ມີຄວາມຕັ້ງໃຈ ແລະ ກ້າຫານ: “ເຖິງແມ່ນຂ້ານ້ອຍເປັນເຊື້ອສາຍຂອງໂມອາບ, ຂ້ານ້ອຍກໍເຕັມໃຈທີ່ຈະພະຍາຍາມເພື່ອພຣະເຈົ້າ. ຂ້ານ້ອຍຈະຫັນຫຼັງໃຫ້ກັບບັນພະບຸລຸດທີ່ເກົ່າແກ່ຂອງຂ້ານ້ອຍ! ເຂົາເຮັດໃຫ້ຂ້ານ້ອຍເກີດ ແລະ ຍັງຢຽບຢໍ່າຂ້ານ້ອຍ ແລະ ຈົນຮອດຕອນນີ້ ຂ້ານ້ອຍກໍພຽງແຕ່ດຳລົງຊີວິດໃນຄວາມມືດມົນ. ໃນປັດຈຸບັນ ພຣະເຈົ້າໄດ້ປົດປ່ອຍຂ້ານ້ອຍ ແລະ ໃນທີ່ສຸດ ຂ້ານ້ອຍໄດ້ເຫັນດວງອາທິດແຫ່ງສະຫວັນ. ຜ່ານການເປີດໂປງຂອງພຣະເຈົ້າ ໃນທີ່ສຸດ ຂ້ານ້ອຍກໍໄດ້ເຫັນວ່າ ຂ້ານ້ອຍເປັນເຊື້ອສາຍຂອງໂມອາບ. ກ່ອນໜ້ານີ້ ຂ້ານ້ອຍຢູ່ໃນຄວາມມືດ ແລະ ຂ້ານ້ອຍບໍ່ຮູ້ວ່າພຣະເຈົ້າໄດ້

ປະຕິບັດພາລະກິດຫຼາຍຢ່າງ, ຍ້ອນວ່າຂ້ານ້ອຍໄດ້ຖືກຊາຕານເຖົ້າເຮັດໃຫ້ຕາບອດ. ຂ້ານ້ອຍຈະຫັນຫຼັງໃຫ້ກັບມັນ ແລະ ເຮັດໃຫ້ມັນອັບອາຍໃນທຸກໆດ້ານ!" ແລ້ວພວກເຈົ້າມີຄວາມຕັ້ງໃຈແບບນັ້ນບໍ? ເຖິງແມ່ນວ່າ ຄວາມຈິງແລ້ວ ພວກເຈົ້າແຕ່ລະຄົນກໍລ້ວນແລ້ວແຕ່ມີລັກສະນະຂອງມະນຸດ, ແຕ່ພວກເຈົ້າເພັງລົງໄວກວ່າຄົນອື່ນໆ ແລະ ພວກເຈົ້າກໍອ່ອນໄຫວທີ່ສຸດຕໍ່ບັນຫາດັ່ງກ່າວ. ທັນທີທີ່ມີການກ່າວເຖິງວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ, ປາກຂອງພວກເຈົ້າກໍບິດເບະ. ນີ້ບໍ່ແມ່ນອຸປະນິໄສຂອງໝູບໍ? ພວກເຈົ້າບໍ່ມີຄ່າເລີຍ. ພວກເຈົ້າເຕັມໃຈທີ່ຈະເສຍສະຫຼະຊີວິດຂອງພວກເຈົ້າເພື່ອເຫັນແກ່ຊື່ສຽງ ແລະ ຊັບສິນຂອງພວກເຈົ້າ! ເຈົ້າອາດຈະບໍ່ເຕັມໃຈເປັນເຊື້ອສາຍຂອງໂມອາບ, ແຕ່ນັ້ນບໍ່ແມ່ນສິ່ງທີ່ເຈົ້າເປັນບໍ? ເຮົາກຳລັງເວົ້າວ່າ ໃນປັດຈຸບັນນີ້ ເຈົ້າເປັນ ແລະ ເຈົ້າກໍຕ້ອງຍອມຮັບເອົາມັນ. ເຮົາບໍ່ກ່າວໃນສິ່ງທີ່ຄັດກັບຄວາມຈິງ. ບາງຄົນມີຄວາມຄິດລົບກໍຍ້ອນສິ່ງນີ້, ແຕ່ມີຫຍັງໃຫ້ຄິດລົບກ່ຽວກັບສິ່ງນີ້? ເຈົ້າບໍ່ແມ່ນເປັນລູກຂອງມັງກອນແດງໃຫຍ່ເຊັ່ນກັນບໍ? ແລ້ວມັນບໍ່ຍຸຕິທຳຢູ່ບ່ອນໃດ ທີ່ຈະເວົ້າວ່າເຈົ້າເປັນເຊື້ອສາຍຂອງໂມອາບ? ຈົ່ງເບິ່ງໃນສິ່ງທີ່ເຈົ້າກຳລັງດຳລົງຊີວິດຕາມ, ຂ້າງໃນ ແລະ ຂ້າງນອກ. ຈາກຫົວຈົນຮອດຕີນ, ບໍ່ມີຫຍັງທີ່ມີຄ່າໃຫ້ໂອ້ອວດເລີຍ. ຄວາມໄຮ້ສິນທຳ, ຄວາມສົກກະປົກ, ຄວາມຕາບອດ, ການຕໍ່ຕ້ານ, ການກະບົດ, ສິ່ງເຫຼົ່ານີ້ບໍ່ແມ່ນສ່ວນໜຶ່ງຂອງອຸປະນິໄສຂອງເຈົ້າບໍ? ເຈົ້າດຳລົງຊີວິດຢູ່ພາຍໃນດິນແດນແຫ່ງຄວາມໄຮ້ສິນທຳຢູ່ສະເໝີ ແລະ ເຈົ້າບໍ່ເຄີຍເຮັດໃນສິ່ງທີ່ບໍ່ຊົ່ວຮ້າຍ. ເຈົ້າຄິດວ່າ ເຈົ້າບໍລິສຸດຫຼາຍ, ເມື່ອເບິ່ງສິ່ງຕ່າງໆທີ່ເຈົ້າໄດ້ເຮັດ ແລະ ເຈົ້າກໍຍັງພໍໃຈກັບຕົນເອງຢ່າງຫຼາຍ. ເຈົ້າໄດ້ເຮັດຫຍັງທີ່ມີຄ່າໃຫ້ສັນລະເສີນແດ່? ເຈົ້າເປັນເໝືອນກັບສັດຮ້າຍ. ເຈົ້າບໍ່ມີຄວາມເປັນມະນຸດ! ເຈົ້າຄົບຄ້າກັບສັດ ແລະ ດຳລົງຊີວິດທ່າມກາງແນວຄິດທີ່ຊົ່ວຮ້າຍ ແລະ ໄຮ້ສິນທຳ. ພວກເຈົ້າກຳລັງຂາດເຂີນຫຼາຍສໍ່າໃດ? ພວກເຈົ້າເຫັນດີວ່າ ພວກເຈົ້າເປັນລູກຂອງມັງກອນແດງໃຫຍ່ ແລະ ພວກເຈົ້າເຕັມໃຈທີ່ຈະຮັບໃຊ້ບໍລິການ, ແຕ່ຕໍ່ມາ ເມື່ອມີການເວົ້າວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ ພວກເຈົ້າກໍເລີ່ມມີຄວາມຄິດລົບ. ສິ່ງນີ້ບໍ່ແມ່ນຄວາມຈິງບໍ? ເໝືອນກັບທີ່ເຈົ້າເກີດຈາກພໍ່ ແລະ ແມ່ຂອງເຈົ້າ, ບໍ່ວ່າພວກເຂົາເປັນຕາຢ້ານສໍ່າໃດ, ແຕ່ເຈົ້າກໍຍັງເກີດຈາກພວກເຂົາ. ເຖິງແມ່ນເຈົ້າໄດ້ພົບແມ່ລ້ຽງ ແລະ ໜີຈາກເຮືອນຂອງເຈົ້າໄປ, ເຈົ້າກໍຍັງເປັນລູກຂອງພໍ່ແມ່ທີ່ໃຫ້ກຳເນີດເຈົ້າຢູ່ດີ ບໍ່ແມ່ນບໍ? ສາມາດປ່ຽນແປງຄວາມຈິງນັ້ນໄດ້ບໍ? ເຮົາໄດ້ເອີ້ນເຈົ້າເປັນເຊື້ອສາຍຂອງໂມອາບໂດຍບໍ່ມີເຫດຜົນບໍ? ບາງຄົນເວົ້າວ່າ: "ພຣະອົງສາມາດເອີ້ນຂ້ານ້ອຍຢ່າງອື່ນໄດ້ບໍ?" ເຮົາກ່າວວ່າ: "ແລ້ວຖ້າເຮົາເອີ້ນເຈົ້າວ່າເປັນຜູ້ປະກອບເດ?" ພວກເຂົາບໍ່ເຕັມໃຈທີ່ຈະເປັນຜູ້ປະກອບຄືກັນ. ແລ້ວເຈົ້າເຕັມໃຈທີ່ຈະເປັນຫຍັງ? ຜູ້ປະກອບ, ຜູ້ເຮັດບໍລິການ, ນີ້ບໍ່ແມ່ນສິ່ງທີ່ພວກເຈົ້າເປັນບໍ? ເຈົ້າຈະເລືອກເປັນຫຍັງອີກ? ເຈົ້າບໍ່ໄດ້ເປັນຄົນທີ່ເກີດໃນປະເທດຂອງມັງກອນແດງໃຫຍ່ບໍ? ບໍ່ວ່າເຈົ້າຈະເວົ້າວ່າເຈົ້າເປັນລູກຂອງເດວິດແນວໃດກໍຕາມ, ມັນກໍບໍ່ໄດ້ສອດຄ່ອງກັບຄວາມຈິງ. ນີ້ແມ່ນສິ່ງທີ່ເຈົ້າໄດ້ເລືອກເອງບໍ? ເຈົ້າສາມາດເລືອກຊື່ອັນງົດງາມທີ່ເຈົ້າມັກໃຫ້ກັບຕົນເອງບໍ? ລູກຂອງມັງກອນແດງໃຫຍ່ທີ່ຖືກກ່າວເຖິງບໍ່ແມ່ນພວກເຈົ້າຜູ້ທີ່ເສື່ອມຊາມບໍ? ສຳລັບຜູ້ເຮັດບໍລິການທີ່ກ່າວເຖິງ, ພວກເຂົາບໍ່ແມ່ນພວກເຈົ້າທີ່ເສື່ອມຊາມເຊັ່ນດຽວກັນບໍ? ຕົວຢ່າງ ແລະ ແບບຢ່າງແຫ່ງການເອົາຊະນະທີ່ຖືກກ່າວເຖິງ, ພວກເຂົາບໍ່

ແມ່ນພວກເຈົ້າເຊັ່ນກັນບໍ? ເສັ້ນທາງຂອງການຖືກເຮັດໃຫ້ສົມບູນ ນັ້ນບໍ່ໄດ້ກ່າວເຖິງເພື່ອພວກເຈົ້າບໍ? ຄົນທີ່ຖືກຂ້ຽນຕີ ແລະ ພິພາກສາແມ່ນພວກເຈົ້າ; ແລ້ວຕໍ່ໄປຄົນທີ່ຈະຖືກເຮັດໃຫ້ສົມບູນບໍ່ແມ່ນບາງຄົນທີ່ຢູ່ທ່າມກາງພວກເຈົ້າບໍ? ຕຳແໜ່ງນີ້ຍັງມີບັນຫາຢູ່ບໍ? ພວກເຈົ້າໄຮ້ສາລະຫຼາຍ; ພວກເຈົ້າບໍ່ສາມາດເຫັນແມ່ນແຕ່ສິ່ງເລັກນ້ອຍດັ່ງກ່າວຢ່າງຊັດເຈນແທ້ບໍ? ເຈົ້າບໍ່ຮູ້ຈັກວ່າແມ່ນໃຜເປັນເຊື້ອສາຍຂອງໃຜ, ແຕ່ເຮົາຊັດເຈນກ່ຽວກັບສິ່ງນັ້ນ ແລະ ເຮົາກຳລັງບອກພວກເຈົ້າ. ຖ້າສາມາດເຂົ້າໃຈມັນໃນມື້ນີ້ ນັ້ນກໍດີແລ້ວ. ຢ່ານອບນ້ອມຕົນເອງຢູ່ສະເໝີຫຼາຍ. ຍິ່ງເຈົ້າຄິດດ້ານລົບ ແລະ ທໍ້ຖອຍຫຼາຍສໍ່າໃດ, ມັນກໍສະແດງໃຫ້ເຫັນວ່າ ເຈົ້າເປັນລູກຫຼານຂອງຊາຕານຫຼາຍສໍ່ານັ້ນ. ມີບາງຄົນເວົ້າວ່າ ເມື່ອເຈົ້າໃຫ້ພວກເຂົາຟັງເພງນະມັດສະການ: “ເຊື້ອສາຍຂອງໂມອາບສາມາດຟັງເພງນະມັດສະການໄດ້ບໍ? ຂ້ານ້ອຍຈະບໍ່ຟັງ; ຂ້ານ້ອຍບໍ່ມີຄຸນສົມບັດ!” ຖ້າເຈົ້າໃຫ້ພວກເຂົາຮ້ອງເພງ, ພວກເຂົາກໍເວົ້າວ່າ: “ຖ້າເຊື້ອສາຍຂອງໂມອາບຮ້ອງເພງ, ພຣະເຈົ້າຈະເຕັມໃຈຟັງບໍ? ພຣະເຈົ້າລັງກຽດຂ້ານ້ອຍ. ຂ້ານ້ອຍອັບອາຍເກີນໄປທີ່ຈະຢູ່ຕໍ່ໜ້າພຣະເຈົ້າ ແລະ ຂ້ານ້ອຍບໍ່ສາມາດເປັນພະຍານໃຫ້ກັບພຣະອົງໄດ້. ຂ້ານ້ອຍຈະບໍ່ຮ້ອງແທ້ໆ ເພື່ອບໍ່ໃຫ້ພຣະເຈົ້າໃຈຮ້າຍເມື່ອພຣະອົງໄດ້ຍິນ”. ສິ່ງນີ້ບໍ່ແມ່ນວິທີທາງລົບທີ່ຈະຈັດການກັບມັນບໍ? ໃນຖານະທີ່ເປັນໜຶ່ງຂອງການເນລະມິດສ້າງ, ເຈົ້າເກີດໃນດິນແດນຂອງຄວາມໄຮ້ສິນທຳ ແລະ ເຈົ້າເປັນລູກຂອງມັງກອນແດງໃຫຍ່, ເຊື້ອສາຍຂອງໂມອາບ; ເຈົ້າຄວນຫັນຫຼັງໃຫ້ບັນພະບຸລຸດເກົ່າແກ່ຂອງເຈົ້າ ແລະ ຫັນຫຼັງໃຫ້ກັບຊາຕານເຖົ້າ. ມີພຽງແຕ່ຄົນທີ່ເຮັດແບບນັ້ນເທົ່ານັ້ນທີ່ຈະເປັນຄົນຕ້ອງການພຣະເຈົ້າຢ່າງແທ້ຈິງ.

ໃນຕອນເລີ່ມຕົ້ນ, ເມື່ອເຮົາມອບຖານະຂອງຜູ້ຄົນຂອງພຣະເຈົ້າໃຫ້ກັບພວກເຈົ້າ ພວກເຈົ້າໂດດເຕັ້ນຂຶ້ນ ແລະ ລົງດ້ວຍຄວາມປິຕິຍິນດີຫຼາຍກວ່າຄົນອື່ນໆ. ແຕ່ທັນທີທີ່ເຮົາບອກວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ ພວກເຈົ້າເປັນແນວໃດ? ພວກເຈົ້າທຸກຄົນລົ້ມລົງ! ວຸດທິພາວະຂອງພວກເຈົ້າຢູ່ໃສ? ແນວຄິດຂອງພວກເຈົ້າກ່ຽວກັບຖານະແມ່ນໜັກແໜ້ນເກີນໄປ! ຄົນສ່ວນຫຼາຍແມ່ນບໍ່ສາມາດຍົກຕົນເອງຂຶ້ນ. ບາງຄົນໄປເຮັດທຸລະກິດ ແລະ ບາງຄົນໄປເຮັດວຽກ. ທັນທີທີ່ເຮົາເວົ້າວ່າ ພວກເຈົ້າເປັນເຊື້ອສາຍຂອງໂມອາບ ພວກເຈົ້າລ້ວນແລ້ວແຕ່ຕ້ອງການແລ່ນໜີ. ນີ້ແມ່ນການເປັນພະຍານໃຫ້ກັບພຣະເຈົ້າທີ່ພວກເຈົ້າຮ້ອງໂຮ່ຢູ່ຕະຫຼອດເວລາບໍ? ຊາຕານຈະຕາຍໃຈໃນວິທີນີ້ບໍ? ນີ້ບໍ່ແມ່ນສັນຍາລັກແຫ່ງຄວາມອັບອາຍບໍ? ມັນມີປະໂຫຍດຫຍັງທີ່ຈະມີພວກເຈົ້າ? ພວກເຈົ້າລ້ວນແລ້ວແຕ່ເປັນຂີ້ເຫຍື້ອ! ແມ່ນຫຍັງຄືການທົນທຸກທີ່ພວກເຈົ້າໄດ້ຮັບທີ່ ພວກເຈົ້າຮູ້ສຶກວ່າຜິດຫຼາຍ? ພວກເຈົ້າຄິດວ່າ ທັນທີທີ່ພຣະເຈົ້າໄດ້ທໍລະມານພວກເຈົ້າຈົນຮອດຈຸດໃດໜຶ່ງ ພຣະອົງຈະມີຄວາມສຸກ, ຄືກັບວ່າພຣະເຈົ້າມາເພື່ອກ່າວໂທດພວກເຈົ້າໂດຍເຈດຕະນາ ແລະ ຫຼັງຈາກທີ່ກ່າວໂທດ ແລະ ທຳລາຍພວກເຈົ້າ, ພາລະກິດຂອງພຣະອົງກໍສຳເລັດລົງ. ນັ້ນແມ່ນສິ່ງທີ່ເຮົາເວົ້າບໍ? ພວກເຈົ້າບໍ່ໄດ້ຄິດແບບນັ້ນຍ້ອນຄວາມຕາບອດຂອງພວກເຈົ້າບໍ? ມັນເປັນຍ້ອນພວກເຈົ້າເອງບໍທີ່ບໍ່ພະຍາຍາມຢ່າງດີ ຫຼື ເປັນຍ້ອນເຮົາທີ່ກ່າວໂທດພວກເຈົ້າໂດຍເຈດຕະນາ? ເຮົາບໍ່ເຄີຍເຮັດແບບນັ້ນຈັກເທື່ອ, ນັ້ນແມ່ນສິ່ງທີ່ພວກເຈົ້າຄິດຂຶ້ນເອງ. ເຮົາບໍ່ໄດ້ປະຕິບັດພາລະກິດແບບນັ້ນເລີຍ ຫຼື ເຮົາບໍ່ມີເຈດຕະນານັ້ນ. ຖ້າເຮົາຕ້ອງການທຳລາຍພວກເຈົ້າແທ້ໆ,

ເຮົາຈຳເປັນຕ້ອງຜະເຊີນກັບຄວາມລຳບາກຂະໜາດນັ້ນບໍ? ຖ້າເຮົາຕ້ອງການທຳລາຍພວກເຈົ້າແທ້ໆ, ເຮົາຈຳເປັນຕ້ອງເວົ້າກັບພວກເຈົ້າຢ່າງເອົາຈິງເອົາຈັງບໍ? ຄວາມປະສົງຂອງເຮົາກໍຄື: ເມື່ອເຮົາໄດ້ຊ່ວຍພວກເຈົ້າໃຫ້ລອດພົ້ນແລ້ວ ນັ້ນກໍຈະເປັນເວລາທີ່ເຮົາສາມາດພັກຜ່ອນໄດ້. ຍິ່ງຄົນຕໍ່າຕ້ອຍຫຼາຍສໍ່າໃດ, ພວກເຂົາຍິ່ງເປັນເປົ້າໝາຍແຫ່ງຄວາມລອດພົ້ນຂອງເຮົາຫຼາຍສໍ່ານັ້ນ. ຍິ່ງພວກເຈົ້າສາມາດເຂົ້າເຖິງຢ່າງກະຕືລືລົ້ນຫຼາຍສໍ່າໃດ, ເຮົາຍິ່ງຈະມີຄວາມສຸກຫຼາຍສໍ່ານັ້ນ. ຍິ່ງພວກເຈົ້າແຕກແຍກກັນຫຼາຍສໍ່າໃດ ເຮົາກໍຍິ່ງບໍ່ສະບາຍໃຈຫຼາຍສໍ່ານັ້ນ. ພວກເຈົ້າຕ້ອງການຍ່າງວາງມາດຊິງ ແລະ ຍຶດເອົາບັນລັງສະເໝີ, ເຮົາຂໍບອກພວກເຈົ້າວ່າ ນັ້ນບໍ່ແມ່ນເສັ້ນທາງໃນການຊ່ວຍພວກເຈົ້າໃຫ້ລອດພົ້ນຈາກຄວາມສົກກະປົກ. ຄວາມເພີ້ຝັນຂອງການນັ່ງເທິງບັນລັງບໍ່ສາມາດເຮັດໃຫ້ພວກເຈົ້າສົມບູນໄດ້; ນັ້ນບໍ່ແມ່ນຄວາມຈິງ. ເຮົາເວົ້າວ່າ ເຈົ້າເປັນເຊື້ອສາຍຂອງໂມອາບ, ແລ້ວເຈົ້າບໍ່ມີຄວາມສຸກ. ເຈົ້າເວົ້າວ່າ: “ຖ້າພຣະອົງເຮັດໃຫ້ຂ້ານ້ອຍຕົກລົງສູ່ຂຸມເລິກທີ່ສຸດ, ຂ້ານ້ອຍຈະບໍ່ເປັນພະຍານໃຫ້ກັບພຣະອົງ ຫຼື ທົນທຸກເພື່ອພຣະອົງ”. ການເຮັດແບບນັ້ນບໍ່ແມ່ນການຕໍ່ຕ້ານເຮົາບໍ? ການເຮັດສິ່ງນີ້ມີປະໂຫຍດກັບເຈົ້າບໍ? ເຮົາໄດ້ມອບຄວາມເມດຕາຢ່າງຫຼວງຫຼາຍໃຫ້ກັບເຈົ້າ, ເຈົ້າໄດ້ລືມແລ້ວບໍ? ພວກເຈົ້າໄດ້ປະຕິເສດຢ່າງໝິ່ນປະໝາດ ແລະ ເຮັດໃຫ້ຫົວໃຈຂອງພຣະເຈົ້າອັບອາຍທີ່ເໝືອນກັບແມ່ທີ່ຮັກ; ຜົນຕາມມາຈະເປັນແນວໃດສຳລັບພວກເຈົ້າ? ຖ້າເຈົ້າບໍ່ເປັນພະຍານໃຫ້ກັບເຮົາ ເຮົາຈະບໍ່ບັງຄັບເຈົ້າ, ແຕ່ເຈົ້າຄວນຮູ້ວ່າ ໃນທີ່ສຸດແລ້ວ ເຈົ້າຈະເປັນເປົ້າໝາຍແຫ່ງການທຳລາຍ. ຖ້າເຮົາບໍ່ສາມາດຮັບເອົາຄຳພະຍານໃນເຈົ້າ, ເຮົາຈະຮັບເອົາມັນຈາກຄົນອື່ນໆ. ນັ້ນບໍ່ແມ່ນເລື່ອງສຳຄັນສຳລັບເຮົາ, ແຕ່ໃນທີ່ສຸດເຈົ້າກໍຈະເສຍໃຈ ແລະ ໃນເວລານັ້ນ ເຈົ້າຈະຕົກລົງສູ່ຄວາມມືດມິດແຕ່ດົນນານແລ້ວ. ແລ້ວແມ່ນໃຜທີ່ຈະສາມາດຊ່ວຍໃຫ້ເຈົ້າລອດພົ້ນໄດ້? ຢ່າຄິດວ່າພາລະກິດບໍ່ສາມາດໄດ້ຮັບການປະຕິບັດຫາກບໍ່ມີເຈົ້າ. ການມີເຈົ້າບໍ່ໄດ້ມີຫຍັງຫຼາຍ ແລະ ການບໍ່ມີເຈົ້າກໍບໍ່ໄດ້ຂາດຫຍັງຫຼາຍ. ຢ່າໃຫ້ກຽດຕົນເອງສູງເກີນໄປ. ຖ້າເຈົ້າບໍ່ເຕັມໃຈທີ່ຈະຕິດຕາມເຮົາ, ນັ້ນກໍສະແດງໃຫ້ເຫັນວ່າ ເຈົ້າກະບົດ ແລະ ບໍ່ມີສິ່ງໃດໜ້າປາຖະໜາໃນຕົວເຈົ້າ. ຖ້າເຈົ້າເປັນຄົນເວົ້າເກັ່ງ, ນັ້ນບໍ່ແມ່ນຍ້ອນເຈົ້າປະກອບດ້ວຍຄຳເວົ້າທີ່ເຮົາໄດ້ນຳມາຜ່ານທາງພາລະກິດຂອງເຮົາບໍ? ເຈົ້າມີຫຍັງໃຫ້ໂອ້ອວດແດ່? ຢ່າປ່ອຍໃຫ້ຈິນຕະນາການຂອງເຈົ້າແລ່ນໜີໄປກັບເຈົ້າ! ຖ້າເຮົາບໍ່ສາມາດຮັບເອົາສະຫງ່າລາສີຈາກພວກເຈົ້າ, ຜູ້ທີ່ເປັນເຊື້ອສາຍຂອງໂມອາບ, ເຮົາກໍຈະຄັດເລືອກເອົາກຸ່ມທີສອງ ແລະ ກຸ່ມທີສາມຂອງເຊື້ອສາຍຂອງໂມອາບເພື່ອປະຕິບັດພາລະກິດຂອງເຮົາຈົນເຮົາໄດ້ຮັບເອົາສະຫງ່າລາສີ. ຖ້າເຈົ້າບໍ່ເຕັມໃຈທີ່ຈະເປັນພະຍານໃຫ້ກັບເຮົາ, ແລ້ວຈົ່ງໜີອອກໄປ! ເຮົາຈະບໍ່ບັງຄັບເຈົ້າ! ຢ່າຄິດວ່າເຮົາບໍ່ສາມາດດຳເນີນບາດກ້າວໃດໜຶ່ງຫາກປາສະຈາກພວກເຈົ້າ. ການຊອກຫາເປົ້າໝາຍທີ່ເໝາະສົມສຳລັບພາລະກິດຂອງເຮົາໃນດິນແດນແຫ່ງປະເທດຈີນນີ້ແມ່ນບໍ່ຕ້ອງໃຊ້ຄວາມພະຍາຍາມຫຍັງເລີຍ. ບໍ່ມີຫຍັງສາມາດຖືກຄົ້ນພົບໃນດິນແດນນີ້ໄດ້, ຄົນສົກກະປົກ ແລະ ເສື່ອມຊາມຢູ່ທຸກຫົນແຫ່ງຢ່າງແນ່ນອນ ແລະ ພາລະກິດຂອງເຮົາສາມາດໄດ້ຮັບການປະຕິບັດຢູ່ບ່ອນໃດກໍໄດ້. ຢ່າພູມໃຈຫຼາຍ! ບໍ່ວ່າເຈົ້າຈະພູມໃຈຫຼາຍສໍ່າໃດ, ເຈົ້າກໍຍັງເປັນລູກທີ່ເກີດຈາກການລ່ວງປະເວນີ ບໍ່ແມ່ນບໍ? ໃຫ້ເບິ່ງຄຸນຄ່າຂອງເຈົ້າ ແລ້ວເຈົ້າມີທາງເລືອກອື່ນບໍ?

ພຽງແຕ່ການຍອມໃຫ້ເຈົ້າມີຊີວິດຢູ່ກໍເປັນການຍົກສູງຢ່າງຫຼວງຫຼາຍແລ້ວ, ແລ້ວເຈົ້າຍັງຈະອວດດີເພື່ອຫຍັງ? ຖ້າມັນບໍ່ແມ່ນເພື່ອໃຫ້ພາລະກິດຂອງເຮົາສິ້ນສຸດຍຸກ, ເຈົ້າຈະບໍ່ໄດ້ຕົກລົງສູ່ໄພພິບາດທາງທຳມະຊາດ ແລະ ໄພໃຫຍ່ຫຼວງທີ່ມະນຸດສ້າງຂຶ້ນຕັ້ງແຕ່ດົນນານມາແລ້ວບໍ? ເຈົ້າຍັງຈະສາມາດດຳລົງຊີວິດຢູ່ຢ່າງສະບາຍໄດ້ບໍ? ເຈົ້າຍັງໂຕ້ຖຽງກ່ຽວກັບບັນຫານີ້ຕະຫຼອດ. ນັບຕັ້ງແຕ່ເຮົາເວົ້າວ່າ ເຈົ້າເປັນເຊື້ອສາຍຂອງໂມອາບ ເຈົ້າກໍເຮັດໜ້າບູດຕະລອດເວລາ. ເຈົ້າບໍ່ໄດ້ສຶກສາຕົນເອງ, ເຈົ້າບໍ່ໄດ້ອ່ານພຣະທຳຂອງພຣະເຈົ້າ ແລະ ເຈົ້າບໍ່ສາມາດອົດກັ້ນຕໍ່ຄົນນີ້ ຫຼື ຄົນນັ້ນ. ເມື່ອເຈົ້າເຫັນຄົນອື່ນໄດ້ຮັບການສຶກສາ ເຈົ້າກໍລົບກວນພວກເຂົາ ແລະ ເວົ້າໃນສິ່ງທີ່ເຮັດໃຫ້ທໍ້ຖອຍໃຈກັບພວກເຂົາ. ເຈົ້າແມ່ນກ້າຫຼາຍ! ເຈົ້າເວົ້າວ່າ: “ເຊື້ອສາຍຂອງໂມອາບສາມາດສຶກສາກ່ຽວກັບຫຍັງໄດ້? ຂ້ານ້ອຍຈະບໍ່ສຶກສາມັນ”. ນີ້ບໍ່ແມ່ນສິ່ງທີ່ສັດຮ້າຍຈະເວົ້າບໍ? ເຈົ້າຍັງນັບວ່າເປັນມະນຸດຢູ່ບໍ? ເຮົາໄດ້ເວົ້າຫຼາຍຢ່າງ, ແຕ່ມັນບໍ່ໄດ້ບັນລຸຫຍັງໃນເຈົ້າເລີຍ. ເຮົາໄດ້ເຮັດພາລະກິດທັງໝົດນີ້ໂດຍໄຮ້ປະໂຫຍດບໍ? ເຮົາໄດ້ເວົ້າພຣະທຳທັງໝົດນີ້ໂດຍສູນເປົ່າບໍ? ແມ່ນແຕ່ໝາຍັງແກວ່ງຫາງຂອງມັນ; ຄົນປະເພດນັ້ນບໍ່ດີແມ່ນແຕ່ສໍ່າກັບໝາເລີຍ! ເຈົ້າຍັງມີຄ່າຖືກເອີ້ນເປັນມະນຸດຢູ່ບໍ? ເມື່ອເຮົາເວົ້າກ່ຽວກັບເຊື້ອສາຍຂອງໂມອາບ, ບາງຄົນເຮັດໃຫ້ຕົນເອງບໍ່ມີຄ່າໂດຍເຈດຕະນາ. ພວກເຂົາແຕ່ງຕົວແຕກຕ່າງກວ່າແຕ່ກ່ອນ ແລະ ບໍ່ເປັນລະບຽບຫຼາຍຈົນພວກເຂົາເບິ່ງບໍ່ຄືກັບມະນຸດ ແລະ ພວກເຂົາກໍຈົ່ມພຶມພຳວ່າ: “ຂ້ານ້ອຍເປັນເຊື້ອສາຍຂອງໂມອາບ, ຂ້ານ້ອຍບໍ່ດີ. ມັນເປັນຄວາມເພີ້ຝັນທີ່ຄິດວ່າຈະໄດ້ຮັບພອນໃດໆ. ເຊື້ອສາຍຂອງໂມອາບສາມາດຖືກເຮັດໃຫ້ສົມບູນບໍ?” ທັນທີທີ່ເຮົາເວົ້າເຖິງເຊື້ອສາຍຂອງໂມອາບ, ຄົນສ່ວນຫຼາຍບໍ່ມີຄວາມຫວັງອີກຕໍ່ໄປ ແລະ ພວກເຂົາເວົ້າວ່າ: “ພຣະເຈົ້າເວົ້າວ່າ ພວກຂ້ານ້ອຍເປັນເຊື້ອສາຍຂອງໂມອາບ, ສິ່ງນັ້ນມີຄວາມໝາຍວ່າແນວໃດ? ເມື່ອເບິ່ງຈາກນໍ້າສຽງຂອງພຣະອົງແລ້ວ, ມັນບໍ່ສາມາດປ່ຽນແປງໄດ້ເລີຍ! ບໍ່ມີຄວາມຮັກໃນພຣະທຳຂອງພຣະອົງ. ພວກເຮົາບໍ່ແມ່ນເປົ້າໝາຍຂອງການທຳລາຍບໍ?” ເຈົ້າລືມສິ່ງທີ່ຖືກເວົ້າກ່ອນໜ້ານີ້ບໍ? ຄຳວ່າ “ເຊື້ອສາຍຂອງໂມອາບ” ແມ່ນສິ່ງດຽວທີ່ເຈົ້າຈື່ບໍ? ຕາມຄວາມຈິງແລ້ວ, ພຣະທຳຫຼາຍຂໍ້ແມ່ນເພື່ອການບັນລຸຜົນ, ແຕ່ພວກມັນຍັງໄດ້ເປີດເຜີຍຄວາມຈິງແຫ່ງຂໍ້ແທ້ຈິງອີກດ້ວຍ. ຄົນສ່ວນໃຫຍ່ບໍ່ເຊື່ອສິ່ງນັ້ນ. ເຈົ້າບໍ່ເຕັມໃຈທີ່ຈະທົນທຸກແບບນັ້ນເພື່ອເຮົາ. ເຈົ້າຢ້ານຄວາມຕາຍ ແລະ ເຈົ້າຕ້ອງການຫຼົບໜີຢູ່ສະເໝີ. ຖ້າເຈົ້າຕ້ອງການໄປ ເຮົາຈະບໍ່ບັງຄັບເຈົ້າໃຫ້ຢູ່, ແຕ່ເຮົາຕ້ອງບອກເຈົ້າໃຫ້ຊັດເຈນກ່ຽວກັບສິ່ງນີ້: ຢ່າດຳລົງຊີວິດທັງໝົດໂດຍສູນເປົ່າ ແລະ ຢ່າລືມສິ່ງຕ່າງໆທີ່ເຮົາບອກເຈົ້າໃນອະດີດ. ໃນຖານະທີ່ເປັນສິ່ງຖືກສ້າງ ເຈົ້າຄວນປະຕິບັດໜ້າທີ່ຂອງສິ່ງຖືກສ້າງ. ຢ່າເຮັດສິ່ງທີ່ຕໍ່ຕ້ານກັບຄວາມຮູ້ສຶກຂອງເຈົ້າ; ສິ່ງທີ່ເຈົ້າຄວນເຮັດກໍຄືອຸທິດຕົນຕໍ່ພຣະຜູ້ເປັນເຈົ້າແຫ່ງການຊົງສ້າງ. ເຊື້ອສາຍຂອງໂມອາບກໍຍັງເປັນສ່ວນໜຶ່ງຂອງສິ່ງຊົງສ້າງ, ພຽງແຕ່ວ່າພວກເຂົາເປັນຕົວປະກອບ ແລະ ພວກເຂົາຖືກສາບແຊ່ງ. ບໍ່ວ່າຫຍັງກໍຕາມ, ເຈົ້າຍັງເປັນໜຶ່ງໃນສິ່ງຖືກສ້າງ. ເຈົ້າບໍ່ໄດ້ຫ່າງໄກຈາກສິ່ງນັ້ນ ຖ້າເຈົ້າເວົ້າວ່າ: “ເຖິງແມ່ນຂ້ານ້ອຍເປັນເຊື້ອສາຍຂອງໂມອາບ, ຂ້ານ້ອຍກໍໄດ້ຮັບຄວາມເມດຕາຂອງພຣະເຈົ້າຢ່າງຫຼວງຫຼາຍທີ່ຂ້ານ້ອຍຕ້ອງມີຄວາມສຳນຶກ. ຂ້ານ້ອຍພຽງແຕ່ຈະຍອມຮັບມັນ ແຕ່ຈະບໍ່ຍຶດຕິດກັບມັນ. ເຖິງແມ່ນຂ້ານ້ອຍຈະທົນທຸກທໍລະມານພາຍໃນກະແສນີ້,

ຂ້ານ້ອຍກໍຈະທົນທຸກຈົນເຖິງທີ່ສຸດ ແລະ ຖ້າຂ້ານ້ອຍເປັນເຊື້ອສາຍຂອງໂມອາບ ກໍໃຫ້ມັນເປັນດັ່ງນັ້ນ. ຂ້ານ້ອຍຈະຍັງຕິດຕາມຈົນເຖິງທີ່ສຸດ!" ເຈົ້າຕ້ອງຕິດຕາມຈົນເຖິງທີ່ສຸດ. ຖ້າເຈົ້າແລ່ນໜີ ເຈົ້າກໍຈະບໍ່ມີຄວາມຄາດຫວັງໃນອະນາຄົດທີ່ແທ້ຈິງ, ເຈົ້າຈະກ້າວເຂົ້າສູ່ຫົນທາງແຫ່ງຄວາມພິນາດ.

ມັນດີສຳລັບພວກເຈົ້າທີ່ຈະເຂົ້າໃຈຕົ້ນກຳເນີດຂອງພວກເຈົ້າ ແລະ ການທີ່ໃຫ້ພວກເຈົ້າເຂົ້າໃຈຄວາມຈິງທີ່ເປັນປະໂຫຍດຕໍ່ພາລະກິດ. ຖ້າບໍ່ເຮັດແບບນັ້ນ, ຜົນທີ່ຄາດຫວັງໄວ້ກໍຈະບໍ່ຖືກບັນລຸຜົນ. ນີ້ແມ່ນສ່ວນໜຶ່ງຂອງພາລະກິດແຫ່ງການເອົາຊະນະ ແລະ ມັນເປັນບາດກ້າວທີ່ຈຳເປັນໃນພາລະກິດ. ນັ້ນແມ່ນຄວາມຈິງ. ພາລະກິດນີ້ແມ່ນມີຈຸດປະສົງເພື່ອປຸກວິນຍານຂອງຜູ້ຄົນ, ປຸກຄວາມຮູ້ສຶກໃນຄວາມສຳນຶກຂອງພວກເຂົາ ແລະ ເຮັດໃຫ້ຜູ້ຄົນໄດ້ຮັບຄວາມລອດພົ້ນທີ່ຍິ່ງໃຫຍ່ນີ້. ຖ້າຄົນໜຶ່ງມີຄວາມສຳນຶກ, ເມື່ອພວກເຂົາເຫັນວ່າພວກເຂົາມີຖານະທີ່ຕໍ່າຕ້ອຍ ພວກເຂົາຍິ່ງຄວນຂອບໃຈພຣະເຈົ້າຫຼາຍຂຶ້ນ. ພວກເຂົາຕ້ອງຍຶດຖືພຣະທຳຂອງພຣະອົງໃນມືຂອງພວກເຂົາ, ຍຶດຖືພຣະຄຸນທີ່ພຣະອົງມອບໃຫ້ກັບພວກເຂົາຢ່າງໜຽວແໜ້ນ ແລະ ຍິ່ງຮ້ອງໄຫ້ຢ່າງຂົມຂື່ນ ແລະ ເວົ້າວ່າ: "ຖານະຂອງພວກຂ້ານ້ອຍຕໍ່າຕ້ອຍຫຼາຍ ແລະ ພວກຂ້ານ້ອຍບໍ່ໄດ້ຮັບຫຍັງເລີຍໃນໂລກນີ້. ບໍ່ມີໃຜສົນໃຈພວກຂ້ານ້ອຍ ທີ່ເປັນຄົນຕໍ່າຕ້ອຍ. ພວກຂ້ານ້ອຍຖືກຂົ່ມເຫັງໃນສະພາບແວດລ້ອມຂອງເຮືອນຊານຂອງພວກຂ້ານ້ອຍ, ຜົວຂອງພວກຂ້ານ້ອຍປະຕິເສດພວກຂ້ານ້ອຍ, ເມຍຂອງພວກຂ້ານ້ອຍດ່າພວກຂ້ານ້ອຍ, ລູກຂອງພວກຂ້ານ້ອຍດູຖູກພວກຂ້ານ້ອຍ ແລະ ເມື່ອພວກຂ້ານ້ອຍເຖົ້າແກ່, ລູກໄພ້ຂອງພວກຂ້ານ້ອຍກໍຍັງປະຕິບັດບໍ່ດີຕໍ່ພວກຂ້ານ້ອຍອີກ. ພວກຂ້ານ້ອຍບໍ່ໄດ້ທົນທຸກໜ້ອຍເລີຍ ແລະ ບັດນີ້ການທີ່ພວກຂ້ານ້ອຍໄດ້ຮັບຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າແມ່ນຊ່າງເປັນໂຊກລາບທີ່ດີຫຼາຍ! ຖ້າພຣະເຈົ້າບໍ່ໄດ້ຊ່ວຍພວກຂ້ານ້ອຍໃຫ້ລອດພົ້ນ, ພວກຂ້ານ້ອຍຈະສາມາດເຫັນຄວາມທຸກທໍລະມານຂອງມະນຸດໄດ້ຢ່າງຈະແຈ້ງແນວໃດ? ພວກຂ້ານ້ອຍຈະຍັງບໍ່ໄດ້ເສື່ອມໂຊມຢູ່ໃນຄວາມບາບນີ້ບໍ? ສິ່ງນີ້ບໍ່ແມ່ນການທີ່ພຣະເຈົ້າຍົກພວກຂ້ານ້ອຍຂຶ້ນບໍ? ຂ້ານ້ອຍເປັນໜຶ່ງໃນຄົນທີ່ຕໍ່າຕ້ອຍທີ່ສຸດ ແລະ ພຣະເຈົ້າໄດ້ຍົກຂ້ານ້ອຍຂຶ້ນສູງຫຼາຍ. ເຖິງແມ່ນວ່າຂ້ານ້ອຍຈະຖືກທຳລາຍ, ຂ້ານ້ອຍກໍຍັງຕ້ອງຕອບແທນຄວາມຮັກຂອງພຣະອົງ. ພຣະເຈົ້າຄິດເຖິງພວກຂ້ານ້ອຍຢ່າງສູງ ແລະ ພຣະອົງກ່າວຕໍ່ໜ້າພວກຂ້ານ້ອຍ ເຊິ່ງເປັນຄົນທີ່ຕໍ່າຕ້ອຍຫຼາຍ. ພຣະອົງຈັບມືຂ້ານ້ອຍເພື່ອສັ່ງສອນຂ້ານ້ອຍ. ພຣະອົງປ້ອນຂ້ານ້ອຍດ້ວຍປາກຂອງພຣະອົງ. ພຣະອົງດຳລົງຊີວິດຢູ່ກັບຂ້ານ້ອຍ ແລະ ທົນທຸກຢູ່ກັບຂ້ານ້ອຍ. ເຖິງແມ່ນວ່າພຣະອົງຈະຂ້ຽນຕີຂ້ານ້ອຍ, ຂ້ານ້ອຍຈະເວົ້າຫຍັງໄດ້? ການຖືກຂ້ຽນຕີບໍ່ແມ່ນການຖືກພຣະເຈົ້າຍົກຂຶ້ນເຊັ່ນກັນບໍ? ຂ້ານ້ອຍຖືກຂ້ຽນຕີ ແຕ່ຂ້ານ້ອຍກໍຍັງສາມາດເຫັນຄວາມຊອບທຳຂອງພຣະອົງ. ຂ້ານ້ອຍບໍ່ສາມາດເປັນຄົນທີ່ບໍ່ມີຄວາມສຳນຶກ, ຂ້ານ້ອຍຕ້ອງຕອບແທນຄວາມຮັກຂອງພຣະເຈົ້າ. ຂ້ານ້ອຍບໍ່ສາມາດກະບົດຕໍ່ພຣະເຈົ້າອີກຕໍ່ໄປ". ຕຳແໜ່ງຂອງພຣະເຈົ້າ ແລະ ສະຖານະຂອງພຣະອົງບໍ່ຄືກັນກັບຜູ້ຄົນ, ແຕ່ການທົນທຸກຂອງພຣະອົງແມ່ນຄືກັນ ແລະ ອາຫານ ແລະ ເຄື່ອງນຸ່ງຫົ່ມຂອງພຣະອົງກໍຄືກັນ, ແຕ່ທຸກຄົນກໍນັບຖືພຣະອົງ ແລະ ນີ້ແມ່ນສິ່ງດຽວທີ່ແຕກຕ່າງກັນ. ສິ່ງອື່ນໆທີ່ພຣະອົງໄດ້ຮັບບໍ່ຄືກັນກັບມະນຸດບໍ? ແລ້ວພວກເຈົ້າມີສິດຫຍັງທີ່ຈະຖາມພຣະເຈົ້າໃຫ້ປະຕິບັດຕໍ່ພວກເຈົ້າໃນວິທີທາງໃດໜຶ່ງ?

ພຣະເຈົ້າໄດ້ອົດກັ້ນຕໍ່ການທົນທຸກທີ່ຍິ່ງໃຫຍ່ ແລະ ປະຕິບັດພາລະກິດທີ່ຍິ່ງໃຫຍ່ ແລະ ພວກເຈົ້າ ເຊິ່ງຕໍ່າຕ້ອຍກວ່າມົດ, ຕໍ່າກວ່າແມງໄມ້ແມ່ນໄດ້ຖືກຍົກຂຶ້ນສູງຫຼາຍໃນປັດຈຸບັນ. ຖ້າເຈົ້າບໍ່ສາມາດ ຕອບແທນຄວາມຮັກຂອງພຣະເຈົ້າໄດ້ ແລ້ວຄວາມສຳນຶກຂອງເຈົ້າແມ່ນຢູ່ໃສ? ບາງຄົນເວົ້າຈາກ ຫົວໃຈຂອງພວກເຂົາວ່າ: "ທຸກຄັ້ງທີ່ຂ້ານ້ອຍຄິດເຖິງການໄປຈາກພຣະເຈົ້າ ຕາຂອງຂ້ານ້ອຍຈະເຕັມ ໄປດ້ວຍນໍ້າຕາ ແລະ ຄວາມສຳນຶກຂອງຂ້ານ້ອຍຖືກສຽບແທງ. ຂ້ານ້ອຍເປັນໜີ້ບຸນຄຸນພຣະເຈົ້າ. ຂ້ານ້ອຍບໍ່ສາມາດເຮັດສິ່ງນີ້ໄດ້. ຂ້ານ້ອຍບໍ່ສາມາດປະຕິບັດຕໍ່ພຣະອົງແບບນັ້ນ. ຖ້າຂ້ານ້ອຍຕ້ອງຕາຍ ແລະ ການຕາຍສາມາດມອບສະຫງ່າລາສີໃຫ້ກັບພາລະກິດຂອງພຣະອົງໄດ້, ຂ້ານ້ອຍຈະເຮັດຢ່າງພໍໃຈ ທີ່ສຸດ. ບໍ່ດັ່ງນັ້ນ ເຖິງແມ່ນຂ້ານ້ອຍດຳລົງຊີວິດຢູ່ ຂ້ານ້ອຍກໍຈະບໍ່ມີຄວາມຮູ້ສຶກສະຫງົບເລີຍ". ໃຫ້ຟັງ ພຣະທຳເຫຼົ່ານີ້, ພຣະທຳເຫຼົ່ານີ້ອະທິບາຍເຖິງໜ້າທີ່ງສັດໂລກຄວນເຮັດໃຫ້ສຳເລັດ. ຖ້າບຸກຄົນໃດໜຶ່ງ ມີນິມິດນີ້ຢູ່ພາຍໃນພວກເຂົາສະເໝີ, ພວກເຂົາກໍຈະຮູ້ສຶກຊັດເຈນຢູ່ພາຍໃນ ແລະ ສະບາຍໃຈ; ພວກເຂົາຈະໝັ້ນໃຈໃນສິ່ງເຫຼົ່ານີ້ຢ່າງແນ່ນອນ. ເຈົ້າຈະເວົ້າວ່າ: "ພຣະເຈົ້າບໍ່ໄດ້ທຳຮ້າຍຂ້ານ້ອຍ ແລະ ພຣະອົງບໍ່ໄດ້ມີເຈດຕະນາຫົວຂວັນຂ້ານ້ອຍ ຫຼື ເຮັດໃຫ້ຂ້ານ້ອຍອັບອາຍ. ເຖິງແມ່ນວ່າພຣະອົງຈະເວົ້າ ສິ່ງທີ່ຂ້ອນຂ້າງຮຸນແຮງ ແລະ ມັນໂຈມຕີເຂົ້າໃນຫົວໃຈ, ມັນກໍແມ່ນເພື່ອຕົວຂ້ານ້ອຍເອງ. ເຖິງ ແມ່ນວ່າພຣະອົງຈະກ່າວຢ່າງຮຸນແຮງຂະໜາດນັ້ນ, ພຣະອົງກໍຍັງຊ່ວຍຂ້ານ້ອຍໃຫ້ລອດພົ້ນ ແລະ ພຣະອົງກໍຍັງຄຳນຶງເຖິງຄວາມອ່ອນແອຂອງຂ້ານ້ອຍ. ພຣະອົງບໍ່ໄດ້ລົງໂທດຂ້ານ້ອຍດ້ວຍຄວາມຈິງ. ຂ້ານ້ອຍເຊື່ອວ່າພຣະເຈົ້າຄືຄວາມລອດພົ້ນ". ຖ້າເຈົ້າມີນິມິດແບບນີ້ແທ້ໆ, ເຈົ້າຈະບໍ່ໜີຈາກໄປ. ຄວາມສຳນຶກຂອງເຈົ້າຈະບໍ່ປ່ອຍເຈົ້າໄປ ແລະ ການຄັດຄ້ານຂອງມັນຈະບອກເຈົ້າວ່າເຈົ້າບໍ່ຄວນປະຕິບັດ ຕໍ່ພຣະເຈົ້າແບບນັ້ນ. ເຈົ້າຄິດເຖິງຄວາມເມດຕາທຸກຢ່າງທີ່ເຈົ້າໄດ້ຮັບເອົາ. ເຈົ້າໄດ້ຍິນພຣະທຳຫຼາຍຂໍ້ ຂອງເຮົາ, ເຈົ້າໄດ້ຟັງພຣະທຳເຫຼົ່ານັ້ນໂດຍສູນເປົ່າບໍ? ບໍ່ວ່າໃຜຈະແລ່ນໜີກໍຕາມ, ແຕ່ເຈົ້າແລ່ນໜີບໍ່ ໄດ້. ຄົນອື່ນບໍ່ເຊື່ອ, ແຕ່ເຈົ້າຕ້ອງເຊື່ອ. ຄົນອື່ນປະຖິ້ມພຣະເຈົ້າ, ແຕ່ເຈົ້າຕ້ອງເຊີດຊູພຣະເຈົ້າ ແລະ ເປັນ ພະຍານໃຫ້ກັບພຣະອົງ. ຄົນອື່ນໃສ່ຮ້າຍພຣະເຈົ້າ, ແຕ່ເຈົ້າບໍ່ຕ້ອງເຮັດ. ບໍ່ວ່າພຣະເຈົ້າຈະບໍ່ເຮັດດີກັບ ເຈົ້າສໍ່າໃດກໍຕາມ, ເຈົ້າຍັງຕ້ອງປະຕິບັດຕໍ່ພຣະອົງຢ່າງຖືກຕ້ອງ. ເຈົ້າຄວນຕອບແທນຄວາມຮັກຂອງ ພຣະອົງ ແລະ ເຈົ້າຕ້ອງມີຄວາມສຳນຶກ ເພາະພຣະເຈົ້າບໍລິສຸດ. ການທີ່ພຣະອົງລົງມາຈາກສະຫວັນຈົນ ເຖິງແຜ່ນດິນໂລກເພື່ອປະຕິບັດພາລະກິດທ່າມກາງມະນຸດຊາດ, ພຣະອົງແມ່ນໄດ້ຮັບຄວາມອັບອາຍທີ່ ຍິ່ງໃຫຍ່ຢູ່ແລ້ວ. ພຣະອົງບໍລິສຸດໂດຍປາສະຈາກຄວາມສົກກະປົກໃດໆ. ໃນການມາເຖິງດິນແດນແຫ່ງ ຄວາມສົກກະປົກ, ພຣະອົງໄດ້ອົດກັ້ນຕໍ່ຄວາມອັບອາຍຫຼາຍສໍ່າໃດ? ພຣະອົງປະຕິບັດພາລະກິດໃນ ພວກເຈົ້າກໍແມ່ນເພື່ອພວກເຈົ້າ. ຖ້າເຈົ້າປະຕິບັດຕໍ່ພຣະອົງຢ່າງໄຮ້ຄວາມສຳນຶກຄິດ, ມັນກໍຈະດີກວ່າ ຖ້າເຈົ້າຕາຍໄປໂດຍໄວ!

ໃນຕອນນີ້, ຄົນສ່ວນໃຫຍ່ກຳລັງຂາດນິມິດໃນລັກສະນະນີ້; ພວກເຂົາບໍ່ສາມາດຢັ່ງເຖິງພາລະກິດ ນີ້ຢ່າງແນ່ນອນ ແລະ ບໍ່ຮູ້ຈັກວ່າ ພຣະເຈົ້າໝາຍເຖິງຫຍັງທີ່ຕ້ອງເຮັດສຳເລັດພາລະກິດນີ້ໃນທີ່ສຸດ. ໂດຍສະເພາະຄົນທີ່ສັບສົນເຫຼົ່ານັ້ນ, ມັນເປັນຄືກັບວ່າ ພວກເຂົາໄດ້ເຂົ້າໄປໃນທາງທີ່ຊັບຊ້ອນ ແລະ

ຫຼືງທາງຫຼັງຈາກສອງສາມໂຄ້ງ. ຖ້າເຈົ້າອະທິບາຍເປົ້າໝາຍຂອງແຜນການຄຸ້ມຄອງຂອງພຣະເຈົ້າໃຫ້ກັບພວກເຂົາຢ່າງລະອຽດ, ພວກເຂົາກໍຈະບໍ່ສັບສົນ. ຫຼາຍຄົນບໍ່ສາມາດຢັ່ງເຖິງມັນໄດ້ ແລະ ເຊື່ອວ່າພາລະກິດຂອງພຣະເຈົ້າແມ່ນເພື່ອທໍລະມານຜູ້ຄົນ. ພວກເຂົາບໍ່ເຂົ້າໃຈສະຕິປັນຍາ ແລະ ຄວາມມະຫັດສະຈັນຂອງພາລະກິດຂອງພຣະອົງ ແລະ ພວກເຂົາບໍ່ເຂົ້າໃຈວ່າ ພາລະກິດຂອງພຣະອົງແມ່ນເພື່ອເປີດເຜີຍລິດອຳນາດທີ່ຍິ່ງໃຫຍ່ຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນກໍຄືການຊ່ວຍມະນຸດຊາດໃຫ້ລອດພົ້ນ. ພວກເຂົາບໍ່ເຫັນສິ່ງທັງໝົດເຫຼົ່ານັ້ນ; ພວກເຂົາພຽງແຕ່ເຫັນວ່າ ພວກເຂົາມີຄວາມຄາດຫວັງຫຍັງ ຫຼື ບໍ່ ແລະ ພວກເຂົາສາມາດເຂົ້າສູ່ສະຫວັນ ຫຼື ບໍ່. ພວກເຂົາເວົ້າວ່າ: "ພາລະກິດຂອງພຣະເຈົ້າມີທາງອ້ອມຫຼາຍຕະລອດ; ມັນຈະເປັນການດີຖ້າໃຫ້ພວກຂ້ານ້ອຍເຫັນເຖິງສະຕິປັນຍາຂອງພຣະອົງໂດຍກົງ. ພຣະອົງບໍ່ຄວນທໍລະມານພວກຂ້ານ້ອຍແບບນີ້. ພວກຂ້ານ້ອຍຂາດໃນຄວາມສາມາດຫຼາຍ ແລະ ພວກຂ້ານ້ອຍບໍ່ເຂົ້າໃຈຄວາມປະສົງຂອງພຣະອົງ. ມັນຈະດີຫຼາຍຖ້າພຣະອົງເວົ້າ ແລະ ກະທຳໂດຍກົງ. ພຣະອົງຕ້ອງການໃຫ້ພວກຂ້ານ້ອຍຄາດເດົາ, ແຕ່ພວກຂ້ານ້ອຍເຮັດບໍ່ໄດ້. ມັນຈະດີຖ້າພຣະອົງຟ້າວ ແລະ ເຮັດໃຫ້ພວກຂ້ານ້ອຍເຫັນເຖິງ ສະຫງ່າລາສີຂອງພຣະອົງ. ເປັນຫຍັງຕ້ອງເຮັດສິ່ງຕ່າງໆໃນລັກສະນະທີ່ອ້ອມຄ້ອມ?" ສິ່ງທີ່ພວກເຈົ້າຂາດທີ່ສຸດໃນຕອນນີ້ກໍຄືຄວາມສຳນຶກ. ຈົ່ງໃຫ້ມີຄວາມສຳນຶກຫຼາຍ. ເປີດຕາຂອງພວກເຈົ້າອອກໃຫ້ກວ້າງເພື່ອຈະໄດ້ເຫັນວ່າ ແມ່ນໃຜທີ່ກຳລັງປະຕິບັດຂັ້ນຕອນຂອງພາລະກິດນີ້ຢ່າງແທ້ຈິງ. ຢ່າຟ້າວດ່ວນສະຫຼຸບ. ບັດນີ້ ຢ່າງຫຼາຍທີ່ສຸດ ເຈົ້າກໍໄດ້ເຂົ້າໃຈບາງຢ່າງກ່ຽວກັບດ້ານພາຍນອກຂອງວິຖີຊີວິດທີ່ເຈົ້າຄວນຜະເຊີນ. ຍັງມີຄວາມຈິງຫຼາຍຢ່າງທີ່ເຈົ້າຕ້ອງຜະເຊີນ ແລະ ເມື່ອມື້ທີ່ເຈົ້າຈະສາມາດເຂົ້າໃຈມັນຢ່າງແທ້ຈິງໄດ້ມາເຖິງ, ເຈົ້າຈະບໍ່ເວົ້າແບບນັ້ນອີກຕໍ່ໄປ ຫຼື ເຈົ້າຈະບໍ່ຕໍ່ວ່າ. ເຈົ້າຈະບໍ່ໃຫ້ນິຍາມສິ່ງນັ້ນຢ່າງງ່າຍໆ. ເຈົ້າຈະເວົ້າວ່າ: "ພຣະເຈົ້າສະຫຼາດຫຼາຍ, ພຣະເຈົ້າບໍລິສຸດຫຼາຍ, ພຣະເຈົ້າມີອຳນາດຫຼາຍ!"

# ປະສົບການຂອງເປໂຕ: ຄວາມຮູ້ຂອງເພິ່ນ ກ່ຽວກັບການຕີສອນ ແລະ ການພິພາກສາ

ເມື່ອເປໂຕກຳລັງຖືກຕີສອນໂດຍພຣະເຈົ້າ, ເພິ່ນອະທິຖານວ່າ "ໂອ ພຣະເຈົ້າ! ເນື້ອໜັງຂອງຂ້ານ້ອຍບໍ່ເຊື່ອຟັງ ແລະ ພຣະອົງຕີສອນຂ້ານ້ອຍ ແລະ ພິພາກສາຂ້ານ້ອຍ. ຂ້ານ້ອຍຊື່ນຊົມຍິນດີໃນການຕີສອນ ແລະ ການພິພາກສາຂອງພຣະອົງ ແລະ ເຖິງແມ່ນວ່າພຣະອົງບໍ່ຕ້ອງການຂ້ານ້ອຍ, ຂ້ານ້ອຍກໍເຫັນເຖິງອຸປະນິໄສທີ່ສັກສິດ ແລະ ຊອບທຳຂອງພຣະອົງໃນການພິພາກສາຂອງພຣະອົງ. ເມື່ອພຣະອົງພິພາກສາຂ້ານ້ອຍ ເພື່ອຄົນອື່ນຈະໄດ້ເຫັນເຖິງອຸປະນິໄສທີ່ຊອບທຳຂອງພຣະອົງໃນການພິພາກສາຂອງພຣະອົງ, ຂ້ານ້ອຍກໍຮູ້ສຶກພໍໃຈ. ຖ້າມັນສາມາດສຳແດງອຸປະນິໄສຂອງພຣະອົງ ແລະ ປ່ອຍໃຫ້ອຸປະນິໄສອັນຊອບທຳຂອງພຣະອົງໄດ້ເປັນທີ່ປະຈັກໂດຍທຸກສິ່ງທີ່ມີຊີວິດ ແລະ ຖ້າມັນສາມາດເຮັດໃຫ້ຄວາມຮັກຂອງຂ້ານ້ອຍສຳລັບພຣະອົງບໍລິສຸດຍິ່ງຂຶ້ນ, ຈົນຂ້ານ້ອຍສາມາດບັນລຸໃນລັກສະນະຂອງຄົນທີ່ຊອບທຳ, ແລ້ວການພິພາກສາຂອງພຣະອົງນີ້ແມ່ນເໝາະສົມດີ ຍ້ອນສິ່ງດັ່ງກ່າວແມ່ນຄວາມປະສົງທີ່ເຕັມໄປດ້ວຍຄວາມເມດຕາຂອງພຣະອົງ. ຂ້ານ້ອຍຮູ້ວ່າ ຍັງມີຫຼາຍສິ່ງໃນຕົວຂ້ານ້ອຍທີ່ເປັນປົນລະປັກ ແລະ ຂ້ານ້ອຍຍັງບໍ່ສົມຄວນທີ່ຈະມາຢູ່ຕໍ່ໜ້າພຣະອົງ. ຂ້ານ້ອຍປາຖະໜາທີ່ຈະໃຫ້ພຣະອົງພິພາກສາຂ້ານ້ອຍຫຼາຍຍິ່ງຂຶ້ນ, ບໍ່ວ່າຜ່ານທາງສະພາບແວດລ້ອມທີ່ໂຫດຮ້າຍ ຫຼື ຄວາມທຸກຍາກລຳບາກທີ່ຍິ່ງໃຫຍ່; ບໍ່ວ່າພຣະອົງຈະກະທຳຫຍັງກໍຕາມ, ມັນກໍມີຄ່າສຳລັບຂ້ານ້ອຍ. ຄວາມຮັກຂອງພຣະອົງເລິກເຊິ່ງຫຼາຍ ແລະ ຂ້ານ້ອຍເຕັມໃຈທີ່ຈະໃຫ້ຕົນເອງຢູ່ໃນການປັ້ນແຕ່ງຂອງພຣະອົງໂດຍບໍ່ຕໍ່ວ່າແມ່ນແຕ່ໜ້ອຍດຽວ". ນີ້ແມ່ນຄວາມຮູ້ຂອງເປໂຕຫຼັງຈາກທີ່ເພິ່ນໄດ້ມີປະສົບການໃນພາລະກິດຂອງພຣະອົງ ແລະ ມັນຍັງເປັນຄຳພະຍານກ່ຽວກັບຄວາມຮັກທີ່ເພິ່ນມີໃຫ້ກັບພຣະເຈົ້າ. ໃນປັດຈຸບັນ, ພວກເຈົ້າໄດ້ຖືກເອົາຊະນະແລ້ວ, ແຕ່ໄຊຊະນະນີ້ຈະຖືກສຳແດງອອກໃນຕົວພວກເຈົ້າໄດ້ແນວໃດ? ບາງຄົນເວົ້າວ່າ "ໄຊຊະນະຂອງຂ້ານ້ອຍແມ່ນຄວາມກະລຸນາສູງສຸດ ແລະ ການສັນລະເສີນພຣະເຈົ້າ. ຂ້ານ້ອຍຫາກໍເຂົ້າໃຈວ່າ ຊີວິດຂອງມະນຸດວ່າງເປົ່າ ແລະ ປາສະຈາກຄວາມໝາຍ. ມະນຸດໃຊ້ຊີວິດຂອງເຂົາຫຍຸ້ງກັບຫຼາຍໆຢ່າງ, ໃຫ້ກຳເນີດ ແລະ ລ້ຽງດູເດັກນ້ອຍຈາກລຸ້ນສູ່ລຸ້ນ ແລະ ໃນທີ່ສຸດແລ້ວກໍຖືກປະຖິ້ມກັບຄວາມວ່າງເປົ່າ. ໃນປັດຈຸບັນ, ມີແຕ່ຫຼັງຈາກທີ່ຖືກເອົາຊະນະໂດຍພຣະເຈົ້າຂ້ານ້ອຍຈຶ່ງໄດ້ເຫັນວ່າ ບໍ່ມີຄຸນຄ່າໃນການດຳລົງຊີວິດແບບນີ້; ມັນເປັນຊີວິດທີ່ບໍ່ມີຄວາມໝາຍຫຍັງແທ້ໆ. ຂ້ານ້ອຍຄວນຈະຕາຍໃຫ້ມັນຮູ້ແລ້ວຮູ້ລອດໄປສະ!" ພຣະເຈົ້າຈະສາມາດຮັບເອົາຄົນປະເພດດັ່ງກ່າວທີ່ຖືກເອົາຊະນະໄດ້ບໍ? ພວກເຂົາສາມາດກາຍມາເປັນຕົວຢ່າງ ແລະ ແບບຢ່າງໄດ້ບໍ? ຄົນປະເພດດັ່ງກ່າວເປັນບົດຮຽນໃນຄວາມບໍ່ດີ້ນລົນ; ພວກເຂົາບໍ່ມີຄວາມປາຖະໜາ ແລະ ບໍ່ພະຍາຍາມທີ່ຈະປັບປຸງຕົວພວກເຂົາເອງ. ເຖິງແມ່ນພວກເຂົາຖືວ່າເປັນຄົນທີ່ຖືກເອົາຊະນະ, ຄົນທີ່ບໍ່ດີ້ນລົນແບບນີ້ກໍບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ເມື່ອໃກ້ເຖິງເວລາສຸດທ້າຍໃນຊີວິດຂອງເປໂຕ, ຫຼັງຈາກທີ່ເພິ່ນຖືກເຮັດໃຫ້ສົມບູນ, ເພິ່ນໄດ້ກ່າວວ່າ "ໂອ ພຣະເຈົ້າ! ຖ້າຂ້ານ້ອຍຕ້ອງມີຊີວິດອີກສອງສາມປີ, ຂ້ານ້ອຍ

ປາຖະໜາທີ່ຈະບັນລຸຄວາມຮັກໃຫ້ພຣະອົງທີ່ບໍລິສຸດຍິ່ງຂຶ້ນ ແລະ ເລິກເຊິ່ງກວ່າເດີມ". ເມື່ອເພິ່ນກຳລັງຈະຖືກຄຶງເທິງໄມ້ກາງແຂນ, ເພິ່ນໄດ້ອະທິຖານໃນຫົວໃຈຂອງເພິ່ນວ່າ "ໂອ ພຣະເຈົ້າ! ເວລາຂອງພຣະອົງໄດ້ມາເຖິງແລ້ວ, ເວລາທີ່ພຣະອົງໄດ້ຈັດກຽມໄວ້ໃຫ້ຂ້ານ້ອຍໄດ້ມາເຖິງແລ້ວ. ຂ້ານ້ອຍຕ້ອງຖືກຄຶງທີ່ໄມ້ກາງແຂນເພື່ອພຣະອົງ, ຂ້ານ້ອຍຕ້ອງເປັນພະຍານໃຫ້ກັບພຣະອົງ ແລະ ຂ້ານ້ອຍຫວັງວ່າຄວາມຮັກຂອງຂ້ານ້ອຍຈະສາມາດສະໜອງຕາມຄວາມຕ້ອງການຂອງພຣະອົງໄດ້ ແລະ ມັນຈະໄດ້ບໍລິສຸດຫຼາຍຍິ່ງຂຶ້ນ. ໃນປັດຈຸບັນ, ການທີ່ສາມາດຕາຍເພື່ອພຣະອົງ ແລະ ຖືກຄຶງເທິງໄມ້ກາງແຂນເພື່ອພຣະອົງນັ້ນ ເປັນສິ່ງທີ່ປອບໃຈ ແລະ ເຮັດໃຫ້ຂ້ານ້ອຍໝັ້ນໃຈ, ຍ້ອນບໍ່ມີຫຍັງທີ່ເປັນຕາຍິນດີໄປກວ່າການທີ່ສາມາດຖືກຄຶງເທິງໄມ້ກາງແຂນເພື່ອພຣະອົງ ແລະ ປະຕິບັດຕາມຄວາມປາຖະໜາຂອງພຣະອົງ ແລະ ການທີ່ສາມາດມອບຕົວຂ້ານ້ອຍເອງໃຫ້ກັບພຣະອົງ, ຖວາຍຊີວິດຂອງຂ້ານ້ອຍໃຫ້ກັບພຣະອົງອີກແລ້ວ. ໂອ ພຣະເຈົ້າ! ພຣະອົງຊ່າງເປັນຕາຮັກຫຼາຍ! ຖ້າພຣະອົງຍອມໃຫ້ຂ້ານ້ອຍມີຊີວິດຢູ່, ຂ້ານ້ອຍກໍຍິ່ງເຕັມໃຈທີ່ຈະຮັກພຣະອົງ. ຕາບໃດທີ່ຂ້ານ້ອຍມີຊີວິດຢູ່, ຂ້ານ້ອຍຈະຮັກພຣະອົງ. ຂ້ານ້ອຍປາຖະໜາທີ່ຈະຮັກພຣະອົງໃຫ້ເລິກເຊິ່ງຫຼາຍຍິ່ງຂຶ້ນ. ພຣະອົງພິພາກສາຂ້ານ້ອຍ ແລະ ຕີສອນຂ້ານ້ອຍ ແລະ ທົດລອງຂ້ານ້ອຍ ເພາະຂ້ານ້ອຍບໍ່ຊອບທຳ, ເພາະຂ້ານ້ອຍໄດ້ເຮັດບາບ. ແລ້ວອຸປະນິໄສທີ່ຊອບທຳຂອງພຣະອົງກໍຍິ່ງປາກົດແຈ້ງໃຫ້ຂ້ານ້ອຍເຫັນ. ນີ້ຄືພຣະພອນສຳລັບຂ້ານ້ອຍ ຍ້ອນຂ້ານ້ອຍສາມາດຮັກພຣະອົງໄດ້ເລິກເຊິ່ງຫຼາຍຍິ່ງຂຶ້ນ ແລະ ຂ້ານ້ອຍເຕັມໃຈທີ່ຈະຮັກພຣະອົງແບບນີ້ ເຖິງແມ່ນວ່າພຣະອົງຈະບໍ່ຮັກຂ້ານ້ອຍ. ຂ້ານ້ອຍເຕັມໃຈທີ່ຈະເຫັນເຖິງອຸປະນິໄສທີ່ຊອບທຳຂອງພຣະອົງ ຍ້ອນສິ່ງນີ້ເຮັດໃຫ້ຂ້ານ້ອຍສາມາດດຳລົງຊີວິດທີ່ມີຄວາມໝາຍຫຼາຍທີ່ສຸດ. ຂ້ານ້ອຍຮູ້ສຶກວ່າ ບັດນີ້ຊີວິດຂອງຂ້ານ້ອຍມີຄວາມໝາຍຫຼາຍຍິ່ງຂຶ້ນ, ຍ້ອນຂ້ານ້ອຍຖືກຄຶງເທິງໄມ້ກາງແຂນເພື່ອເຫັນແກ່ພຣະອົງ ແລະ ມັນມີຄວາມໝາຍທີ່ຈະຕາຍເພື່ອພຣະອົງ. ແຕ່ຂ້ານ້ອຍກໍຍັງຮູ້ສຶກບໍ່ພໍໃຈ, ຍ້ອນຂ້ານ້ອຍຮູ້ຈັກກ່ຽວກັບພຣະອົງພຽງແຕ່ໜ້ອຍດຽວ, ຂ້ານ້ອຍຮູ້ຈັກວ່າ ຂ້ານ້ອຍບໍ່ສາມາດປະຕິບັດຕາມຄວາມປາຖະໜາຂອງພຣະອົງຢ່າງຄົບຖ້ວນ ແລະ ໄດ້ຕອບແທນພຣະອົງພຽງແຕ່ເລັກນ້ອຍ. ໃນຊີວິດຂອງຂ້ານ້ອຍ, ຂ້ານ້ອຍບໍ່ສາມາດຕອບແທນໝົດທັງຕົວຕົນຂອງຂ້ານ້ອຍໃຫ້ກັບພຣະອົງ; ຂ້ານ້ອຍແຮງໄກຈາກສິ່ງນັ້ນ. ເມື່ອຂ້ານ້ອຍຫຼຽວເບິ່ງຄືນໃນຊ່ວງເວລານີ້, ຂ້ານ້ອຍຮູ້ສຶກຕິດໜີ້ບຸນຄຸນພຣະອົງຫຼາຍ ແລະ ຂ້ານ້ອຍມີພຽງແຕ່ຊ່ວງເວລານີ້ທີ່ຈະຊົດເຊີຍຄວາມຜິດພາດທຸກຢ່າງຂອງຂ້ານ້ອຍ ແລະ ຄວາມຮັກທັງໝົດທີ່ຂ້ານ້ອຍຍັງບໍ່ທັນໄດ້ຕອບແທນພຣະອົງເທື່ອ".

ມະນຸດຕ້ອງສະແຫວງຫາເພື່ອດຳລົງຊີວິດທີ່ມີຄວາມໝາຍ ແລະ ບໍ່ຄວນພໍໃຈກັບສະຖານະການໃນປັດຈຸບັນຂອງເຂົາ. ເພື່ອດຳລົງຊີວິດຕາມລັກສະນະຂອງເປໂຕ, ເຂົາຕ້ອງປະກອບດ້ວຍຄວາມຮູ້ ແລະ ປະສົບການຂອງເປໂຕ. ມະນຸດຕ້ອງສະແຫວງຫາສິ່ງຕ່າງໆທີ່ສູງສົ່ງກວ່າເກົ່າ ແລະ ເລິກເຊິ່ງຫຼາຍຍິ່ງຂຶ້ນ. ເຂົາຕ້ອງສະແຫວງຫາຄວາມຮັກພຣະເຈົ້າທີ່ເລິກເຊິ່ງຂຶ້ນ ແລະ ບໍລິສຸດຫຼາຍຍິ່ງຂຶ້ນ ແລະ ຊີວິດທີ່ມີຄຸນຄ່າ ແລະ ຄວາມໝາຍ. ມີແຕ່ສິ່ງນີ້ເທົ່ານັ້ນທີ່ເປັນຊີວິດ; ມີແຕ່ເມື່ອນັ້ນ ມະນຸດຈຶ່ງຈະເປັນເໝືອນກັບເປໂຕ. ເຈົ້າຕ້ອງໃຫ້ຄວາມສຳຄັນກັບການມີທ່າທີຕໍ່ການເຂົ້າສູ່ດ້ານບວກຂອງເຈົ້າ ແລະ

ຕ້ອງບໍ່ຍອມຈຳນົນໃຫ້ຕົນເອງຖອຍຫຼັງໂດຍເຫັນແກ່ຄວາມສະບາຍຊົ່ວໄລຍະໜຶ່ງ ໃນຂະນະທີ່ບໍ່ຫົວຊາກັບຄວາມຈິງທີ່ເລິກເຊິ່ງຍິ່ງຂຶ້ນ, ເຈາະຈົງຍິ່ງຂຶ້ນ ແລະ ຕາມຄວາມເປັນຈິງຍິ່ງຂຶ້ນ. ຄວາມຮັກຂອງເຈົ້າຕ້ອງຕາມຄວາມເປັນຈິງ ແລະ ເຈົ້າຕ້ອງຄົ້ນຫາຫົນທາງທີ່ຈະປົດປ່ອຍຕົນເອງອອກຈາກຊີວິດທີ່ຊົ່ວຊ້ານີ້ ແລະ ມີຊີວິດທີ່ບໍ່ມີຫຍັງກັງວົນທີ່ບໍ່ແຕກຕ່າງຫຍັງຈາກຊີວິດຂອງສັດ. ເຈົ້າຕ້ອງດຳລົງຊີວິດທີ່ມີຄວາມໝາຍ, ຊີວິດທີ່ມີຄຸນຄ່າ ແລະ ເຈົ້າບໍ່ຕ້ອງຫຼອກລວງຕົນເອງ ຫຼື ປະຕິບັດກັບຊີວິດຂອງເຈົ້າເໝືອນກັບເຄື່ອງຫຼິ້ນສຳລັບຫຼິ້ນໄປມາ. ສຳລັບທຸກຄົນທີ່ສະແຫວງຫາເພື່ອຮັກພຣະເຈົ້າ, ບໍ່ມີຄວາມຈິງໃດທີ່ບໍ່ສາມາດໄດ້ມາ ແລະ ບໍ່ມີຄວາມຍຸຕິທຳໃດທີ່ພວກເຂົາບໍ່ສາມາດຍຶດໝັ້ນໄດ້. ເຈົ້າຄວນດຳລົງຊີວິດຂອງເຈົ້າແນວໃດ? ເຈົ້າຄວນຮັກພຣະເຈົ້າ ແລະ ໃຊ້ຄວາມຮັກນີ້ເພື່ອປະຕິບັດຕາມຄວາມປາຖະໜາຂອງພຣະອົງແນວໃດ? ບໍ່ມີບັນຫາໃດທີ່ຍິ່ງໃຫຍ່ກວ່າໃນຊີວິດຂອງເຈົ້າ. ເໜືອສິ່ງອື່ນໃດ, ເຈົ້າຕ້ອງມີຄວາມປາຖະໜາ ແລະ ຄວາມພາກພຽນດັ່ງກ່າວ ແລະ ບໍ່ຄວນເປັນຄືກັນກັບຄົນທີ່ຂີ້ຢ້ານ, ຄົນທີ່ອ່ອນແອ. ເຈົ້າຕ້ອງຮຽນຮູ້ຈັກວິທີປະສົບກັບຊີວິດທີ່ມີຄວາມໝາຍ ແລະ ປະສົບກັບຄວາມຈິງທີ່ມີຄວາມໝາຍ ແລະ ບໍ່ຄວນປະຕິບັດກັບຕົນເອງພຽງຜິວເຜີນໃນລັກສະນະນັ້ນ. ຊີວິດຂອງເຈົ້າກໍ່ຈະຜ່ານເຈົ້າໄປໂດຍບໍ່ຮູ້ສຶກຕົວ; ຫຼັງຈາກນັ້ນ ເຈົ້າຈະມີໂອກາດທີ່ຈະຮັກພຣະເຈົ້າອີກຄັ້ງບໍ? ມະນຸດສາມາດຮັກພຣະເຈົ້າຫຼັງຈາກເຂົາໄດ້ຕາຍໄປແລ້ວບໍ? ເຈົ້າຕ້ອງມີຄວາມປາຖະໜາ ແລະ ຄວາມສຳນຶກເໝືອນກັບເປໂຕ; ຊີວິດຂອງເຈົ້າຕ້ອງມີຄວາມໝາຍ ແລະ ເຈົ້າຕ້ອງບໍ່ຫຼິ້ນເກມກັບຕົວເຈົ້າເອງ. ໃນຖານະທີ່ເປັນມະນຸດ ແລະ ເປັນຄົນທີ່ສະແຫວງຫາພຣະເຈົ້າ, ເຈົ້າຕ້ອງສາມາດພິຈາລະນາຢ່າງລະມັດລະວັງວ່າເຈົ້າຈະປະຕິບັດກັບຊີວິດຂອງເຈົ້າແນວໃດ, ເຈົ້າຄວນຖວາຍຕົນເອງໃຫ້ກັບພຣະເຈົ້າແນວໃດ, ເຈົ້າຄວນມີຄວາມເຊື່ອທີ່ມີຄວາມໝາຍຂຶ້ນຕື່ມໃນພຣະເຈົ້າແນວໃດ ແລະ ໃນເມື່ອເຈົ້າຮັກພຣະເຈົ້າ ເຈົ້າຄວນຮັກພຣະອົງໃນວິທີທາງທີ່ບໍລິສຸດຍິ່ງຂຶ້ນ, ສວຍງາມຍິ່ງຂຶ້ນ ແລະ ດີຍິ່ງຂຶ້ນແນວໃດ. ໃນປັດຈຸບັນ, ເຈົ້າບໍ່ສາມາດພໍໃຈແຕ່ກັບວິທີທີ່ເຈົ້າຖືກເອົາຊະນະ, ແຕ່ຕ້ອງພິຈາລະນາເສັ້ນທາງທີ່ເຈົ້າຈະຍ່າງໃນອະນາຄົດເຊັ່ນກັນ. ເຈົ້າຕ້ອງມີຄວາມປາຖະໜາ ແລະ ຄວາມກ້າຫານທີ່ຈະຖືກເຮັດໃຫ້ສົມບູນ ແລະ ບໍ່ຄວນຄິດຢູ່ສະເໝີວ່າ ຕົວເຈົ້າເອງບໍ່ມີຄວາມສາມາດ. ຄວາມຈິງມີຄວາມລຳອຽງບໍ? ຄວາມຈິງສາມາດຕໍ່ຕ້ານຄົນໂດຍເຈດຕະນາໄດ້ບໍ? ຖ້າເຈົ້າສະແຫວງຫາຄວາມຈິງ, ມັນສາມາດເຮັດໃຫ້ເຈົ້າເກີດຄວາມໜັກໃຈໄດ້ບໍ? ຖ້າເຈົ້າຍຶດໝັ້ນເພື່ອຄວາມຍຸຕິທຳ, ມັນຈະຕີໃຫ້ເຈົ້າລົ້ມລົງບໍ? ຖ້າມັນເປັນຄວາມປາຖະໜາຂອງເຈົ້າແທ້ໆທີ່ຈະສະແຫວງຫາຊີວິດ, ຊີວິດຈະສາມາດຫຼົບຫຼີກເຈົ້າໄດ້ບໍ? ຖ້າເຈົ້າປາສະຈາກຊີວິດ, ນັ້ນບໍ່ແມ່ນຍ້ອນວ່າ ຄວາມຈິງເບິ່ງຂ້າມເຈົ້າ, ແຕ່ຍ້ອນເຈົ້າຢູ່ຫ່າງຈາກຄວາມຈິງ; ຖ້າເຈົ້າບໍ່ສາມາດຍຶດໝັ້ນໃນຄວາມຍຸຕິທຳ, ນັ້ນບໍ່ແມ່ນຍ້ອນວ່າ ມີບາງສິ່ງບາງຢ່າງຜິດປົກກະຕິກັບຄວາມຍຸຕິທຳ, ແຕ່ຍ້ອນເຈົ້າເຊື່ອວ່າ ມັນອອກນອກເສັ້ນແຫ່ງຄວາມຈິງ; ຖ້າເຈົ້າບໍ່ໄດ້ຮັບຊີວິດຫຼັງຈາກທີ່ໄດ້ສະແຫວງຫາມັນເປັນເວລາຫຼາຍປີ, ນັ້ນບໍ່ແມ່ນຍ້ອນວ່າ ຊີວິດບໍ່ມີຄວາມສຳນຶກຕໍ່ເຈົ້າ, ແຕ່ຍ້ອນວ່າ ເຈົ້າບໍ່ມີຄວາມສຳນຶກຕໍ່ຊີວິດ ແລະ ໄດ້ຂັບໄລ່ຊີວິດນັ້ນໃຫ້ອອກໄປ; ຖ້າເຈົ້າດຳລົງຊີວິດຢູ່ໃນແສງສະຫວ່າງ ແລະ ບໍ່ສາມາດຮັບເອົາແສງສະຫວ່າງ, ນັ້ນບໍ່ແມ່ນຍ້ອນວ່າ ແສງສະຫວ່າງບໍ່ສາມາດ

ເບີ່ງທາງໃຫ້ກັບເຈົ້າ, ແຕ່ຍ້ອນວ່າ ເຈົ້າບໍ່ໄດ້ສົນໃຈກັບການມີຢູ່ຈິງຂອງແສງສະຫວ່າງ ແລະ ດ້ວຍເຫດນັ້ນ ແສງສະຫວ່າງຈຶ່ງໄດ້ຈາກເຈົ້າໄປຢ່າງງຽບໆ. ຖ້າເຈົ້າບໍ່ສະແຫວງຫາ, ສາມາດເວົ້າໄດ້ພຽງແຕ່ວ່າ ເຈົ້າເປັນຂີ້ເຫຍື້ອທີ່ບໍ່ມີຄ່າ ແລະ ບໍ່ມີຄວາມກ້າຫານໃນຊີວິດຂອງເຈົ້າ ແລະ ບໍ່ມີຈິດວິນຍານທີ່ຈະຕ້ານທານກຳລັງແຫ່ງຄວາມມືດ. ເຈົ້າອ່ອນແອເກີນໄປ! ເຈົ້າບໍ່ສາມາດຫຼີບໜີຈາກກຳລັງຂອງຊາຕານທີ່ອ້ອມລ້ອມເຈົ້າ ແລະ ເຈົ້າພຽງເຕັມໃຈທີ່ຈະໃຊ້ຊີວິດປະເພດທີ່ປອດໄພ, ໝັ້ນຄົງນີ້ ແລະ ຕາຍໄປກັບຄວາມໂງ່ເທົ່ານັ້ນ. ສິ່ງທີ່ເຈົ້າຄວນບັນລຸແມ່ນການສະແຫວງຫາເພື່ອຖືກເອົາຊະນະ; ນີ້ແມ່ນໜ້າທີ່ຈຳເປັນຂອງເຈົ້າ. ຖ້າເຈົ້າພໍໃຈທີ່ຈະຖືກເອົາຊະນະ, ເຈົ້າແມ່ນໄດ້ຂັບໄລ່ການເປັນຢູ່ຂອງຄວາມສະຫວ່າງ. ເຈົ້າຕ້ອງທົນທຸກກັບຄວາມຍາກລຳບາກເພື່ອຄວາມຈິງ, ເຈົ້າຕ້ອງມອບຕົນເອງໃຫ້ແກ່ຄວາມຈິງ, ເຈົ້າຕ້ອງອົດກັ້ນຕໍ່ຄວາມອັບອາຍຂາຍໜ້າເພື່ອຄວາມຈິງ ແລະ ເພື່ອທີ່ຈະຮັບເອົາຄວາມຈິງຫຼາຍຍິ່ງຂຶ້ນ ເຈົ້າຕ້ອງຜ່ານການທົນທຸກທີ່ຫຼາຍຂຶ້ນ. ນີ້ແມ່ນສິ່ງທີ່ເຈົ້າຄວນເຮັດ. ເຈົ້າບໍ່ຕ້ອງໂຍນຄວາມຈິງຖິ້ມເພື່ອເຫັນແກ່ຊີວິດຄອບຄົວທີ່ສະຫງົບສຸກ ແລະ ເຈົ້າບໍ່ຕ້ອງສູນເສຍສັກສີ ແລະ ຄວາມໝັ້ນຄົງໃນຊີວິດຂອງເຈົ້າເພື່ອເຫັນແກ່ຄວາມສຸກຊົ່ວໄລຍະໜຶ່ງ. ເຈົ້າຄວນສະແຫວງຫາທຸກສິ່ງທີ່ສວຍງາມ ແລະ ດີ ແລະ ເຈົ້າຄວນສະແຫວງຫາເສັ້ນທາງໃນຊີວິດທີ່ມີຄວາມໝາຍຫຼາຍຍິ່ງຂຶ້ນ. ຖ້າເຈົ້າມີຊີວິດທີ່ຕໍ່າຊ້າແບບນີ້ ແລະ ບໍ່ສະແຫວງຫາຈຸດປະສົງໃດເລີຍ, ເຈົ້າບໍ່ໄດ້ເຮັດໃຫ້ຊີວິດຂອງເຈົ້າເສຍຖິ້ມຊື່ໆບໍ? ເຈົ້າຈະສາມາດຮັບເອົາຫຍັງແດ່ຈາກຊີວິດດັ່ງກ່າວ? ເຈົ້າຄວນປະຖິ້ມຄວາມສຸກທຸກຢ່າງຈາກຝ່າຍເນື້ອໜັງເພື່ອເຫັນແກ່ຄວາມຈິງ ແລະ ບໍ່ຄວນໂຍນຄວາມຈິງທັງໝົດຖິ້ມເພື່ອເຫັນແກ່ຄວາມສຸກເລັກນ້ອຍ. ຄົນແບບນີ້ບໍ່ມີຄວາມຊື່ສັດ ຫຼື ສັກສີ; ຊ່າງບໍ່ມີຄວາມໝາຍໃນການເປັນຢູ່ຂອງພວກເຂົາເລີຍ!

ພຣະເຈົ້າຕີສອນ ແລະ ພິພາກສາມະນຸດ ເພາະມັນຈຳເປັນຕໍ່ພາລະກິດຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ເພາະມັນຈຳເປັນຕໍ່ມະນຸດ. ມະນຸດຕ້ອງຖືກຕີສອນ ແລະ ພິພາກສາ ແລະ ມີພຽງແຕ່ເມື່ອນັ້ນເຂົາຈຶ່ງຈະສາມາດບັນລຸຄວາມຮັກສຳລັບພຣະເຈົ້າ. ໃນປັດຈຸບັນ, ພວກເຈົ້າໝັ້ນໃຈຫຼາຍ, ແຕ່ເມື່ອພວກເຈົ້າພະເຊີນກັບຄວາມລົ້ມເຫຼວພຽງເລັກນ້ອຍ ພວກເຈົ້າກໍມີບັນຫາແລ້ວ; ວຸດທິພາວະຂອງພວກເຈົ້າຍັງຕໍ່າຫຼາຍ ແລະ ພວກເຈົ້າຍັງຕ້ອງພະເຊີນກັບການຕີສອນ ແລະ ການພິພາກສາແບບນີ້ເພີ່ມຂຶ້ນອີກເພື່ອບັນລຸຄວາມຮູ້ທີ່ເລິກເຊິ່ງກວ່າເກົ່າ. ໃນປັດຈຸບັນ, ພວກເຈົ້າມີຄວາມເຄົາລົບນັບຖືບາງສ່ວນໃຫ້ກັບພຣະເຈົ້າ ແລະ ພວກເຈົ້າຢຳເກງພຣະເຈົ້າ ແລະ ພວກເຈົ້າຮູ້ວ່າ ພຣະອົງເປັນພຣະເຈົ້າທີ່ແທ້ຈິງ, ແຕ່ພວກເຈົ້າບໍ່ໄດ້ມີຄວາມຮັກທີ່ຍິ່ງໃຫຍ່ສຳລັບພຣະອົງ, ແລ້ວແຮງໄກທີ່ພວກເຈົ້າຈະບັນລຸຄວາມຮັກທີ່ບໍລິສຸດໄດ້; ຄວາມຮູ້ຂອງພວກເຈົ້າຕື້ນເກີນໄປ ແລະ ວຸດທິພາວະຂອງພວກເຈົ້າກໍຍັງບໍ່ພຽງພໍ. ເມື່ອເຈົ້າພະເຊີນກັບສະພາບແວດລ້ອມທີ່ແທ້ຈິງ, ເຈົ້າກໍຍັງບໍ່ຍອມເປັນພະຍານ, ເຈົ້າມີທ່າທີກັບທາງເຂົ້າສູ່ຂອງເຈົ້າໜ້ອຍເກີນໄປ ແລະ ເຈົ້າບໍ່ຮູ້ຈັກວິທີປະຕິບັດເລີຍ. ຄົນສ່ວນໃຫຍ່ບໍ່ດິ້ນລົນ ແລະ ຂີ້ຄ້ານ; ພວກເຂົາພຽງແຕ່ຮັກພຣະເຈົ້າຢ່າງລັບໆໃນຫົວໃຈຂອງພວກເຂົາ, ແຕ່ບໍ່ມີຫົນທາງໃນການປະຕິບັດ ຫຼື ພວກເຂົາບໍ່ຊັດເຈນໃນເລື່ອງທີ່ວ່າ ເປົ້າໝາຍຂອງພວກເຂົາແມ່ນຫຍັງ. ຄົນທີ່ຖືກເຮັດໃຫ້ສົມບູນບໍ່ພຽງແຕ່ປະກອບມີຄວາມເປັນມະນຸດທີ່ປົກກະຕິ, ແຕ່ປະກອບມີຄວາມຈິງທີ່ຢູ່ເກີນມາດຕະການຂອງ

ຄວາມສຳນຶກ ແລະ ສູງກວ່າມາດຕະຖານຂອງຄວາມສຳນຶກ; ພວກເຂົາບໍ່ພຽງແຕ່ໃຊ້ຄວາມສຳນຶກຂອງພວກເຂົາເພື່ອຕອບແທນຄວາມຮັກຂອງພຣະເຈົ້າ ແຕ່ຍິ່ງໄປກວ່ານັ້ນ ພວກເຂົາໄດ້ຮູ້ຈັກພຣະເຈົ້າ ແລະ ໄດ້ເຫັນວ່າພຣະເຈົ້າເປັນຕາຮັກ ແລະ ສົມຄວນແກ່ຄວາມຮັກຂອງມະນຸດ ແລະ ມີຫຼາຍສິ່ງຫຼາຍຢ່າງທີ່ຈະຮັກໃນພຣະເຈົ້າ; ມະນຸດບໍ່ມີທາງເລືອກຫຍັງເລີຍນອກຈາກຮັກພຣະອົງ! ຄວາມຮັກສຳລັບພຣະເຈົ້າຂອງຄົນທີ່ຖືກເຮັດໃຫ້ສົມບູນກໍເພື່ອປະຕິບັດຕາມຄວາມປາຖະໜາສ່ວນຕົວຂອງພວກເຂົາເອງ. ຄວາມຮັກຂອງພວກເຂົາແມ່ນຄວາມຮັກທີ່ສະໝັກໃຈ, ຄວາມຮັກທີ່ບໍ່ຮຽກຮ້ອງຫຍັງເປັນການຕອບແທນ ແລະ ບໍ່ແມ່ນການແລກປ່ຽນ. ພວກເຂົາຮັກພຣະເຈົ້າ ຍ້ອນຄວາມຮູ້ທີ່ພວກເຂົາມີກ່ຽວກັບພຣະອົງລ້ວນໆ. ຄົນປະເພດດັ່ງກ່າວບໍ່ສົນໃຈວ່າ ພຣະເຈົ້າປະທານຄວາມກະລຸນາມາເຖິງພວກເຂົາ ຫຼື ບໍ່ ແລະ ບໍ່ພໍໃຈກັບສິ່ງໃດນອກຈາກການເຮັດໃຫ້ພຣະເຈົ້າເພິ່ງພໍໃຈ. ພວກເຂົາບໍ່ຕໍ່ລອງກັບພຣະເຈົ້າ ຫຼື ພວກເຂົາບໍ່ວັດແທກຄວາມຮັກທີ່ພວກເຂົາມີໃຫ້ກັບພຣະເຈົ້າໂດຍໃຊ້ຄວາມສຳນຶກ ນັ້ນກໍຄື: “ພຣະອົງໄດ້ມອບບາງຢ່າງໃຫ້ກັບຂ້ານ້ອຍ ສະນັ້ນ ຂ້ານ້ອຍຈຶ່ງຮັກພຣະອົງເປັນການຕອບແທນ; ຖ້າພຣະອົງບໍ່ມອບຫຍັງໃຫ້ກັບຂ້ານ້ອຍ ແລ້ວຂ້ານ້ອຍກໍບໍ່ມີຫຍັງໃຫ້ເປັນການຕອບແທນ” ຄົນທີ່ຖືກເຮັດໃຫ້ສົມບູນເຊື່ອຢູ່ສະເໝີວ່າ: “ພຣະເຈົ້າຊົງເປັນພຣະຜູ້ສ້າງ ແລະ ພຣະອົງປະຕິບັດພາລະກິດຂອງພຣະອົງເທິງພວກເຮົາ. ຍ້ອນຂ້ານ້ອຍໄດ້ຮັບໂອກາດ, ມີເງື່ອນໄຂ ແລະ ຄຸນສົມບັດທີ່ຈະຖືກເຮັດໃຫ້ສົມບູນ, ການສະແຫວງຫາຂອງຂ້ານ້ອຍຄວນເປັນການດຳລົງຊີວິດທີ່ມີຄວາມໝາຍ ແລະ ຂ້ານ້ອຍຄວນເຮັດໃຫ້ພຣະອົງພໍໃຈ”. ມັນເປັນເໝືອນກັບສິ່ງທີ່ເປໂຕໄດ້ຜະເຊີນ ນັ້ນກໍຄື: ເມື່ອເພິ່ນອ່ອນແອທີ່ສຸດ, ເພິ່ນອະທິຖານຫາພຣະເຈົ້າ ແລະ ເວົ້າວ່າ “ໂອ ພຣະເຈົ້າ! ບໍ່ວ່າຈະເປັນເວລາໃດ ຫຼື ສະຖານທີ່ໃດ, ພຣະອົງຮູ້ວ່າ ຂ້ານ້ອຍຈົດຈຳພຣະອົງຢູ່ສະເໝີ. ບໍ່ວ່າຈະເປັນເວລາໃດ ຫຼື ສະຖານທີ່ໃດ, ພຣະອົງຮູ້ວ່າ ຂ້ານ້ອຍຕ້ອງການຮັກພຣະອົງ, ແຕ່ວຸດທິພາວະຂອງຂ້ານ້ອຍມີຕໍ່າເກີນໄປ, ຂ້ານ້ອຍອ່ອນແອເກີນໄປ ແລະ ບໍ່ມີອຳນາດ, ຄວາມຮັກຂອງຂ້ານ້ອຍກໍມີຈຳກັດຫຼາຍ ແລະ ຄວາມຈິງໃຈທີ່ຂ້ານ້ອຍມີຕໍ່ພຣະອົງກໍມີໜ້ອຍເກີນໄປ. ເມື່ອທຽບກັບຄວາມຮັກຂອງພຣະອົງ, ຂ້ານ້ອຍບໍ່ເໝາະສົມທີ່ຈະມີຊີວິດຢູ່ແທ້ໆ. ຂ້ານ້ອຍປາຖະໜາພຽງແຕ່ວ່າ ຊີວິດຂອງຂ້ານ້ອຍຈະບໍ່ສູນເປົ່າ ແລະ ຂ້ານ້ອຍຈະບໍ່ພຽງແຕ່ສາມາດຕອບແທນຄວາມຮັກຂອງພຣະອົງ ແຕ່ຍິ່ງໄປກວ່ານັ້ນ ຂ້ານ້ອຍສາມາດອຸທິດທຸກສິ່ງທີ່ຂ້ານ້ອຍມີໃຫ້ກັບພຣະອົງ. ຖ້າຂ້ານ້ອຍສາມາດເຮັດໃຫ້ພຣະອົງພໍພຣະໄທ, ແລ້ວໃນຖານະທີ່ເປັນສິ່ງຊົງສ້າງ ຂ້ານ້ອຍກໍຄວນມີຈິດໃຈທີ່ສະຫງົບ ແລະ ບໍ່ຮຽກຮ້ອງຫຍັງອີກເລີຍ. ເຖິງແມ່ນວ່າຂ້ານ້ອຍອ່ອນແອ ແລະ ບໍ່ມີອຳນາດໃນຕອນນີ້, ຂ້ານ້ອຍຈະບໍ່ລືມຄຳຕັກເຕືອນຂອງພຣະອົງ ແລະ ຂ້ານ້ອຍຈະບໍ່ລືມຄວາມຮັກຂອງພຣະອົງ. ບັດນີ້ ຂ້ານ້ອຍບໍ່ໄດ້ເຮັດຫຍັງເລີຍ ນອກຈາກຕອບແທນຄວາມຮັກຂອງພຣະອົງ. ໂອ ພຣະເຈົ້າ! ຂ້ານ້ອຍຮູ້ສຶກບໍ່ດີຫຼາຍ! ຂ້ານ້ອຍຈະມອບຄວາມຮັກທີ່ຢູ່ໃນຫົວໃຈຂອງຂ້ານ້ອຍໃຫ້ກັບພຣະອົງໄດ້ແນວໃດ, ຂ້ານ້ອຍຈະເຮັດທຸກສິ່ງທຸກຢ່າງທີ່ຂ້ານ້ອຍສາມາດເຮັດໄດ້ ແລະ ຈະສາມາດປະຕິບັດຕາມຄວາມປາຖະໜາຂອງພຣະອົງ ແລະ ຈະສາມາດຖວາຍທຸກສິ່ງທຸກຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງໄດ້ແນວໃດ? ພຣະອົງຮູ້ເຖິງຄວາມອ່ອນແອຂອງມະນຸດ; ຂ້ານ້ອຍຈະສົມຄວນແກ່ຄວາມຮັກຂອງພຣະອົງ

ໄດ້ແນວໃດ? ໂອ ພຣະເຈົ້າ! ພຣະອົງຮູ້ວ່າ ຂ້ານ້ອຍມີວຸດທິພາວະຕໍ່າ, ຄວາມຮັກຂອງຂ້ານ້ອຍກໍມີໜ້ອຍເກີນໄປ. ຈະໃຫ້ຂ້ານ້ອຍເຮັດສຸດຄວາມສາມາດຂອງຂ້ານ້ອຍໃນສະພາບແວດລ້ອມແບບນີ້ໄດ້ແນວໃດ? ຂ້ານ້ອຍຮູ້ວ່າ ຂ້ານ້ອຍຄວນຕອບແທນຄວາມຮັກຂອງພຣະອົງ, ຂ້ານ້ອຍຮູ້ວ່າ ຂ້ານ້ອຍຄວນມອບທຸກຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງ, ແຕ່ໃນປັດຈຸບັນນີ້ ວຸດທິພາວະຂອງຂ້ານ້ອຍມີຢູ່ນັ້ນຕໍ່າຫຼາຍ. ຂ້ານ້ອຍຂໍໃຫ້ພຣະອົງມອບກຳລັງ ແລະ ຄວາມໝັ້ນໃຈໃຫ້ກັບຂ້ານ້ອຍ ເພື່ອຂ້ານ້ອຍຈະສາມາດປະກອບມີຄວາມຮັກທີ່ບໍລິສຸດທີ່ຈະອຸທິດໃຫ້ກັບພຣະອົງຫຼາຍຍິ່ງຂຶ້ນ ແລະ ຈະສາມາດອຸທິດທຸກສິ່ງທຸກຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງຫຼາຍຍິ່ງຂຶ້ນ; ຂ້ານ້ອຍຈະບໍ່ພຽງແຕ່ສາມາດຕອບແທນຄວາມຮັກຂອງພຣະອົງເທົ່ານັ້ນ, ແຕ່ຂ້ານ້ອຍຈະສາມາດຜະເຊີນກັບການຕີສອນ, ການພິພາກສາ ແລະການທົດລອງຂອງພຣະອົງຫຼາຍຍິ່ງຂຶ້ນ ແລະ ຍິ່ງໄປກວ່ານັ້ນກໍຈະສາມາດຜະເຊີນໜ້າກັບການສາບແຊ່ງທີ່ໂຫດຮ້າຍ. ພຣະອົງຊົງຍອມໃຫ້ຂ້ານ້ອຍເຫັນຄວາມຮັກຂອງພຣະອົງ ແລະ ຂ້ານ້ອຍບໍ່ສາມາດທີ່ຈະບໍ່ຮັກພຣະອົງ ແລະ ເຖິງແມ່ນວ່າຂ້ານ້ອຍອ່ອນແອ ແລະ ບໍ່ມີອຳນາດໃນປັດຈຸບັນ, ຂ້ານ້ອຍຈະລືມພຣະອົງໄດ້ແນວໃດ? ຄວາມຮັກ, ການຕີສອນ ແລະ ການພິພາກສາຂອງພຣະອົງໄດ້ເຮັດໃຫ້ຂ້ານ້ອຍຮູ້ຈັກພຣະອົງ, ແຕ່ຂ້ານ້ອຍກໍຍັງບໍ່ສາມາດສະໜອງຄວາມຮັກຂອງພຣະອົງໄດ້, ຍ້ອນພຣະອົງຊົງຍິ່ງໃຫຍ່ຫຼາຍ. ຂ້ານ້ອຍຈະສາມາດອຸທິດທຸກສິ່ງທີ່ຂ້ານ້ອຍມີໃຫ້ກັບພຣະຜູ້ສ້າງໄດ້ແນວໃດ?” ສິ່ງດັ່ງກ່າວແມ່ນຄຳຂໍຮ້ອງຂອງເປໂຕ, ແຕ່ວຸດທິພາວະຂອງເພິ່ນຍັງບໍ່ພຽງພໍຫຼາຍ. ໃນຊ່ວງເວລານີ້, ເພິ່ນຮູ້ສຶກຄືກັບວ່າ ມີມີດກຳລັງສຽບແທງໃນຫົວໃຈຂອງເພິ່ນ. ເພິ່ນກໍເຈັບປວດທໍລະມານທີ່ສຸດ; ເພິ່ນບໍ່ຮູ້ວ່າຈະເຮັດແນວໃດພາຍໃຕ້ສະພາບການດັ່ງກ່າວ. ແຕ່ເພິ່ນກໍຍັງສືບຕໍ່ອະທິຖານວ່າ “ໂອ ພຣະເຈົ້າ! ມະນຸດມີວຸດທິພາວະທີ່ເປັນເໝືອນກັບເດັກນ້ອຍ, ຄວາມສຳນຶກຂອງເຂົາກໍອ່ອນແອ ແລະ ສິ່ງດຽວທີ່ຂ້ານ້ອຍສາມາດບັນລຸໄດ້ກໍຄືການຕອບແທນຄວາມຮັກຂອງພຣະອົງ. ໃນປັດຈຸບັນ, ຂ້ານ້ອຍບໍ່ຮູ້ວິທີທີ່ຈະປະຕິບັດຕາມຄວາມປາຖະໜາຂອງພຣະອົງ ແລະ ຂ້ານ້ອຍພຽງແຕ່ປາຖະໜາເຮັດທຸກສິ່ງທຸກຢ່າງທີ່ຂ້ານ້ອຍສາມາດເຮັດໄດ້, ມອບທຸກສິ່ງທຸກຢ່າງທີ່ຂ້ານ້ອຍມີ ແລະ ອຸທິດທຸກສິ່ງທຸກຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງ. ບໍ່ວ່າຈະເປັນການພິພາກສາຂອງພຣະອົງ, ບໍ່ວ່າຈະເປັນການຕີສອນຂອງພຣະອົງ, ບໍ່ວ່າຈະເປັນສິ່ງທີ່ພຣະອົງຊົງປະທານໃຫ້ກັບຂ້ານ້ອຍ, ບໍ່ວ່າຈະເປັນສິ່ງທີ່ພຣະອົງຊົງເອົາໄປຈາກຂ້ານ້ອຍ, ຂໍໃຫ້ປົດປ່ອຍຂ້ານ້ອຍຈາກການຕໍ່ວ່າພຣະອົງທີ່ເລັກໆນ້ອຍໆນີ້ດ້ວຍເທີດ. ຫຼາຍຄັ້ງ ເມື່ອພຣະອົງຕີສອນຂ້ານ້ອຍ ແລະ ພິພາກສາຂ້ານ້ອຍ, ຂ້ານ້ອຍຈົ່ມພືມພໍາກັບຕົນເອງ ແລະ ບໍ່ສາມາດບັນລຸຄວາມບໍລິສຸດໄດ້ ຫຼື ປະຕິບັດຕາມຄວາມປາຖະໜາຂອງພຣະອົງໄດ້. ການທີ່ຂ້ານ້ອຍຕອບແທນຄວາມຮັກຂອງພຣະອົງແມ່ນເກີດມາຈາກການບັງຄັບ ແລະ ໃນຊ່ວງເວລານີ້ ຂ້ານ້ອຍກຽດຊັງຕົນເອງຫຼາຍຍິ່ງຂຶ້ນ”. ມັນເປັນຍ້ອນ ເພິ່ນສະແຫວງຫາຄວາມຮັກທີ່ບໍລິສຸດຍິ່ງຂຶ້ນສຳລັບພຣະເຈົ້າ ເປໂຕຈຶ່ງອະທິຖານໃນລັກສະນະນີ້. ເພິ່ນກຳລັງສະແຫວງຫາ ແລະ ອ້ອນວອນ ແລະ ຍິ່ງໄປກວ່ານັ້ນກໍຄື ເພິ່ນກຳລັງກ່າວດ່າຕົນເອງ ແລະ ສາລະພາບຄວາມຜິດບາບຂອງເພິ່ນຕໍ່ພຣະເຈົ້າ. ເພິ່ນຮູ້ສຶກເປັນໜີ້ບຸນຄຸນພຣະເຈົ້າ ແລະຮູ້ສຶກກຽດຊັງຕົວເພິ່ນເອງ, ເຖິງຢ່າງນັ້ນກໍຕາມ ເພິ່ນຍັງຂ້ອນຂ້າງໂສກເສົ້າ ແລະ ບໍ່ດິ້ນລົນ. ເພິ່ນຮູ້ສຶກ

ແບບນັ້ນຢູ່ສະເໝີ, ເໝືອນກັບວ່າ ເພິ່ນບໍ່ດີພໍສຳລັບຄວາມປາຖະໜາຂອງພຣະເຈົ້າ ແລະ ບໍ່ສາມາດກະທຳສຸດຄວາມສາມາດຂອງເພິ່ນ. ພາຍໃຕ້ສະພາບການດັ່ງກ່າວ, ເປໂຕຍັງສະແຫວງຫາຄວາມເຊື່ອຂອງໂຢບ. ເພິ່ນເຫັນວ່າ ຄວາມເຊື່ອຂອງໂຢບນັ້ນຍິ່ງໃຫຍ່ຫຼາຍສໍ່າໃດ, ຍ້ອນໂຢບໄດ້ເຫັນທຸກສິ່ງທຸກຢ່າງທີ່ພຣະເຈົ້າຊົງປະທານໃຫ້ກັບເພິ່ນ ແລະ ມັນເປັນເລື່ອງທຳມະຊາດທີ່ພຣະເຈົ້າຈະເອົາທຸກສິ່ງໄປຈາກເພິ່ນ, ພຣະເຈົ້າຈະຊົງມອບໃຫ້ກັບໃຜກໍຕາມທີ່ພຣະອົງຊົງປາຖະໜາ, ສິ່ງນີ້ຄືອຸປະນິໄສທີ່ຊອບທຳຂອງພຣະເຈົ້າ. ໂຢບບໍ່ມີການຈົ່ມວ່າໃດໆເລີຍ ແລະ ຍັງສັນລະເສີນພຣະເຈົ້າອີກ. ເປໂຕກໍຮູ້ຈັກຕົວເພິ່ນເອງດີ ແລະ ເພິ່ນໄດ້ອະທິຖານໃນຫົວໃຈຂອງເພິ່ນວ່າ "ມື້ນີ້ ຂ້ານ້ອຍບໍ່ຄວນພໍໃຈກັບການຕອບແທນຄວາມຮັກຂອງພຣະອົງດ້ວຍຄວາມສຳນຶກຜິດ ແລະ ດ້ວຍຄວາມຮັກ ບໍ່ວ່າຈະຫຼາຍສໍ່າໃດກໍຕາມທີ່ຂ້ານ້ອຍມອບໃຫ້ກັບພຣະອົງຄືນ, ເພາະວ່າຄວາມຄິດຂອງຂ້ານ້ອຍເສື່ອມຊາມເກີນໄປ ແລະ ເພາະວ່າຂ້ານ້ອຍບໍ່ສາມາດເຫັນພຣະອົງເປັນພຣະຜູ້ສ້າງເທື່ອ. ເພາະຂ້ານ້ອຍຍັງບໍ່ເໝາະສົມທີ່ຈະຮັກພຣະອົງ, ຂ້ານ້ອຍຕ້ອງປູກຝັງຄວາມສາມາດທີ່ຈະອຸທິດທຸກສິ່ງທຸກຢ່າງທີ່ຂ້ານ້ອຍມີໃຫ້ກັບພຣະອົງ ເຊິ່ງຂ້ານ້ອຍຈະກະທຳມັນຢ່າງເຕັມໃຈ. ຂ້ານ້ອຍຮູ້ເຖິງທຸກສິ່ງຢ່າງທີ່ພຣະອົງໄດ້ຊົງກະທຳ ແລະ ຂ້ານ້ອຍບໍ່ມີທາງເລືອກ ແລະ ຂ້ານ້ອຍຕ້ອງເຫັນເຖິງຄວາມຮັກຂອງພຣະອົງ ແລະ ຂ້ານ້ອຍຈະສາມາດກ່າວສັນລະເສີນພຣະອົງ ແລະ ຍົກຍ້ອງພຣະນາມອັນສັກສິດຂອງພຣະອົງ ເພື່ອພຣະອົງຈະຊົງຮັບພຣະລັດສະໝີທີ່ຍິ່ງໃຫຍ່ຜ່ານທາງຂ້ານ້ອຍ. ຂ້ານ້ອຍເຕັມໃຈທີ່ຈະຍຶດໝັ້ນໃນຄຳພະຍານນີ້ໃຫ້ກັບພຣະອົງ. ໂອ ພຣະເຈົ້າ! ຄວາມຮັກຂອງພຣະອົງຊ່າງລ້ຳຄ່າ ແລະ ງົດງາມຫຼາຍ; ຈະໃຫ້ຂ້ານ້ອຍປາຖະໜາມີຊີວິດຢູ່ໃນກຳມືຂອງຜູ້ທີ່ຊົ່ວຮ້າຍໄດ້ແນວໃດ? ພຣະອົງບໍ່ໄດ້ສ້າງຂ້ານ້ອຍບໍ? ຈະໃຫ້ຂ້ານ້ອຍດຳລົງຊີວິດຢູ່ພາຍໃຕ້ການຄອບງຳຂອງຊາຕານໄດ້ແນວໃດ? ຂ້ານ້ອຍຂໍເລືອກໃຫ້ການເປັນຢູ່ທັງໝົດຂອງຂ້ານ້ອຍຢູ່ທ່າມກາງການຕີສອນຂອງພຣະອົງຫຼາຍກວ່າ. ຂ້ານ້ອຍບໍ່ເຕັມໃຈທີ່ຈະມີຊີວິດຢູ່ພາຍໃຕ້ການຄວບຄຸມຂອງຜູ້ທີ່ຊົ່ວຮ້າຍ. ຖ້າຂ້ານ້ອຍສາມາດຖືກເຮັດໃຫ້ບໍລິສຸດໄດ້ ແລະ ສາມາດອຸທິດທຸກສິ່ງທຸກຢ່າງຂອງຂ້ານ້ອຍໃຫ້ກັບພຣະອົງ, ຂ້ານ້ອຍເຕັມໃຈທີ່ຈະຖວາຍຮ່າງກາຍ ແລະ ຈິດໃຈຂອງຂ້ານ້ອຍເຂົ້າໃນການພິພາກສາ ແລະ ການຕີສອນຂອງພຣະອົງ, ຍ້ອນຂ້ານ້ອຍກຽດຊັງຊາຕານ ແລະ ບໍ່ເຕັມໃຈທີ່ຈະມີຊີວິດຢູ່ພາຍໃຕ້ການຄວບຄຸມຂອງມັນ. ຜ່ານການພິພາກສາຂອງພຣະອົງທີ່ມີຕໍ່ຂ້ານ້ອຍ, ພຣະອົງໄດ້ຊົງສຳແດງເຖິງອຸປະນິໄສທີ່ຊອບທຳຂອງພຣະອົງ; ຂ້ານ້ອຍມີຄວາມສຸກ ແລະ ບໍ່ມີການຕໍ່ວ່າແມ່ນແຕ່ໜ້ອຍດຽວ. ຖ້າຂ້ານ້ອຍສາມາດປະຕິບັດໜ້າທີ່ຂອງສິ່ງຊົງສ້າງ, ຂ້ານ້ອຍເຕັມໃຈໃຫ້ຊີວິດທັງໝົດຂອງຂ້ານ້ອຍຖືກຕິດຕາມໂດຍການພິພາກສາຂອງພຣະອົງ ໂດຍຜ່ານສິ່ງນັ້ນ ຂ້ານ້ອຍຈຶ່ງຈະຮຽນຮູ້ຈັກອຸປະນິໄສທີ່ຊອບທຳຂອງພຣະອົງ ແລະ ຈະກຳຈັດຕົນເອງໃຫ້ອອກຈາກອິດທິພົນຂອງຜູ້ທີ່ຊົ່ວຮ້າຍ". ເປໂຕອະທິຖານແບບນີ້, ສະແຫວງຫາແບບນີ້ຢູ່ສະເໝີ ແລະ ຂ້ອນຂ້າງເວົ້າໄດ້ວ່າ ລາວໄດ້ໄປເຖິງຂອບເຂດທີ່ສູງຫຼາຍ. ບໍ່ພຽງແຕ່ເພິ່ນສາມາດຕອບແທນຄວາມຮັກຂອງພຣະເຈົ້າເທົ່ານັ້ນ, ແຕ່ທີ່ສຳຄັນໄປກວ່ານັ້ນ ເພິ່ນຍັງໄດ້ປະຕິບັດໜ້າທີ່ຂອງເພິ່ນໃນຖານະທີ່ເປັນສິ່ງຊົງສ້າງ. ບໍ່ພຽງແຕ່ເພິ່ນກ່າວໂທດຄວາມສຳນຶກຂອງເພິ່ນເທົ່ານັ້ນ, ແຕ່ເພິ່ນຍັງສາມາດຢູ່ເໜືອມາດຕະຖານຂອງຄວາມສຳນຶກ. ຄຳ

ອະທິຖານຂອງເພິ່ນສືບຕໍ່ເພີ່ມຂຶ້ນຕໍ່ໜ້າພຣະເຈົ້າ ຈົນຄວາມປາຖະໜາຂອງເພິ່ນຍິ່ງສູງຂຶ້ນຫຼາຍກວ່າເກົ່າ ແລະ ຄວາມຮັກທີ່ເພິ່ນມີສຳລັບພຣະເຈົ້າກໍຍິ່ງໃຫຍ່ຂຶ້ນເລື້ອຍໆ. ເຖິງແມ່ນວ່າ ເພິ່ນໄດ້ທົນທຸກກັບຄວາມເຈັບປວດແສນທໍລະມານ, ເພິ່ນກໍຍັງບໍ່ລືມທີ່ຈະຮັກພຣະເຈົ້າ ແລະ ເພິ່ນກໍຍັງສະແຫວງຫາເພື່ອບັນລຸຄວາມສາມາດທີ່ຈະເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າ. ໃນຄຳອະທິຖານຂອງເພິ່ນ, ເພິ່ນໄດ້ກ່າວຄຳເວົ້າດັ່ງຕໍ່ໄປນີ້: "ຂ້ານ້ອຍບໍ່ໄດ້ສຳເລັດຫຍັງຫຼາຍໄປກວ່າການຕອບແທນຄວາມຮັກຂອງພຣະອົງ. ຂ້ານ້ອຍບໍ່ໄດ້ເປັນພະຍານໃຫ້ກັບພຣະອົງຕໍ່ໜ້າຊາຕານ, ບໍ່ໄດ້ປົດປ່ອຍຕົນເອງຈາກອິດທິພົນຂອງຊາຕານ ແລະ ຍັງດຳລົງຊີວິດທ່າມກາງເນື້ອໜັງ. ຂ້ານ້ອຍປາຖະໜາທີ່ຈະໃຊ້ຄວາມຮັກຂອງຂ້ານ້ອຍເພື່ອເອົາຊະນະຊາຕານ, ເຮັດໃຫ້ມັນອັບອາຍ ແລ້ວປະຕິບັດຕາມຄວາມປາຖະໜາຂອງພຣະອົງ. ຂ້ານ້ອຍປາຖະໜາທີ່ຈະມອບຊີວິດທັງໝົດຂອງຂ້ານ້ອຍໃຫ້ກັບພຣະອົງ, ບໍ່ມອບແມ່ນແຕ່ສ່ວນເລັກນ້ອຍຂອງຂ້ານ້ອຍໃຫ້ກັບຊາຕານ ຍ້ອນຊາຕານເປັນສັດຕູຂອງພຣະອົງ". ຍິ່ງເພິ່ນສະແຫວງຫາໃນທິດທາງນີ້ຫຼາຍສໍ່າໃດ, ເພິ່ນກໍຍິ່ງໄດ້ຮັບການສຳຜັດຫຼາຍສໍ່ານັ້ນ ແລະ ຄວາມຮູ້ຂອງເພິ່ນກ່ຽວກັບບັນຫາເຫຼົ່ານີ້ກໍຍິ່ງສູງຂຶ້ນຫຼາຍສໍ່ານັ້ນ. ໂດຍບໍ່ຮູ້ຕົວ ເພິ່ນໄດ້ຮຽນຮູ້ວ່າ ເພິ່ນຄວນປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກອິດທິພົນຂອງຊາຕານ ແລະ ຄວນກັບຄືນມາຫາພຣະເຈົ້າຢ່າງສົມບູນ. ສິ່ງດັ່ງກ່າວແມ່ນຂອບເຂດທີ່ເພິ່ນໄດ້ຮັບ. ເພິ່ນກຳລັງຢູ່ເໜືອອິດທິພົນຂອງຊາຕານ ແລະ ປົດປ່ອຍຕົນເອງອອກຈາກຄວາມສຸກ ແລະ ຄວາມມ່ວນຊື່ນທາງເນື້ອໜັງ ແລະ ເຕັມໃຈທີ່ຈະປະສົບກັບທັງການຕີສອນຂອງພຣະເຈົ້າ ແລະ ການພິພາກສາຂອງພຣະອົງໄດ້ຢ່າງເລິກເຊິ່ງຍິ່ງຂຶ້ນ. ເພິ່ນກ່າວວ່າ "ເຖິງແມ່ນຂ້ານ້ອຍດຳລົງຊີວິດຢູ່ທ່າມກາງການຕີສອນຂອງພຣະອົງ ແລະ ທ່າມກາງການພິພາກສາຂອງພຣະອົງ, ບໍ່ວ່າສິ່ງນັ້ນຈະນຳມາສູ່ຄວາມຍາກລຳບາກຫຍັງກໍຕາມ, ຂ້ານ້ອຍກໍຍັງບໍ່ເຕັມໃຈທີ່ຈະດຳລົງຊີວິດຢູ່ທ່າມກາງການຄວບຄຸມຂອງຊາຕານ, ຂ້ານ້ອຍກໍຍັງບໍ່ເຕັມໃຈທີ່ຈະທົນທຸກຕໍ່ກົນອຸບາຍຂອງຊາຕານ. ຂ້ານ້ອຍມີຄວາມປິຕິຍິນດີໃນການດຳລົງຊີວິດຢູ່ທ່າມກາງການສາບແຊ່ງຂອງພຣະອົງ ແລະ ເຈັບປວດໂດຍການດຳລົງຊີວິດຢູ່ທ່າມກາງການອວຍພອນຂອງຊາຕານ. ຂ້ານ້ອຍຮັກພຣະອົງໂດຍການດຳລົງຊີວິດຢູ່ທ່າມກາງການພິພາກສາຂອງພຣະອົງ ແລະ ສິ່ງນີ້ກໍນຳຄວາມປິຕິຍິນດີອັນໃຫຍ່ຫຼວງມາສູ່ຂ້ານ້ອຍ. ການຕີສອນ ແລະ ການພິພາກສາຂອງພຣະອົງຊອບທຳ ແລະ ສັກສິດ; ມັນແມ່ນເພື່ອຊຳລະລ້າງຂ້ານ້ອຍ ແລະ ຍິ່ງໄປກວ່ານັ້ນ ມັນແມ່ນເພື່ອຊ່ວຍໃຫ້ຂ້ານ້ອຍລອດພົ້ນ. ຂ້ານ້ອຍເລືອກທີ່ຈະໃຊ້ຊີວິດທັງໝົດຂອງຂ້ານ້ອຍທ່າມກາງການພິພາກສາເພື່ອວ່າຂ້ານ້ອຍອາດຢູ່ພາຍໃຕ້ການດູແລຂອງພຣະອົງ. ຂ້ານ້ອຍບໍ່ເຕັມໃຈທີ່ຈະດຳລົງຊີວິດຢູ່ພາຍໃຕ້ການຄວບຄຸມຂອງຊາຕານແມ່ນແຕ່ຊ່ວງເວລາດຽວ; ຂ້ານ້ອຍປາຖະໜາທີ່ຈະໄດ້ຮັບການຊຳລະລ້າງຈາກພຣະອົງ; ເຖິງແມ່ນວ່າ ຂ້ານ້ອຍຕ້ອງທົນທຸກກັບຄວາມຍາກລຳບາກ, ຂ້ານ້ອຍກໍບໍ່ເຕັມໃຈທີ່ຈະຖືກຂູດຮີດ ແລະ ຖືກຫຼອກລວງໂດຍຊາຕານ. ຂ້ານ້ອຍ ເຊິ່ງເປັນສິ່ງຊົງສ້າງນີ້ຄວນຖືກພຣະອົງໃຊ້, ຖືກພຣະອົງຄອບຄອງ, ຖືກພຣະອົງພິພາກສາ ແລະ ຖືກພຣະອົງຕີສອນ. ຍິ່ງໄປກວ່ານັ້ນ ຂ້ານ້ອຍຄວນຖືກພຣະອົງສາບແຊ່ງ. ຫົວໃຈຂອງຂ້ານ້ອຍຍິນດີເມື່ອພຣະອົງເຕັມໃຈທີ່ຈະອວຍພອນຂ້ານ້ອຍ ຍ້ອນຂ້ານ້ອຍໄດ້ເຫັນເຖິງຄວາມຮັກຂອງພຣະອົງ. ພຣະອົງເປັນພຣະຜູ້ສ້າງ

ແລະ ຂ້ານ້ອຍເປັນສິ່ງຊົງສ້າງ ນັ້ນກໍຄື: ຂ້ານ້ອຍບໍ່ຄວນຫັກຫຼັງພຣະອົງ ແລະ ດຳລົງຊີວິດຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ຫຼື ຂ້ານ້ອຍບໍ່ຄວນຖືກຂູດຮີດໂດຍຊາຕານ. ຂ້ານ້ອຍຄວນເປັນມ້າ ຫຼື ງົວຂອງພຣະອົງ ແທນທີ່ຈະດຳລົງຊີວິດເພື່ອຊາຕານ. ຂ້ານ້ອຍຂໍດຳລົງຊີວິດຢູ່ທ່າມກາງການຕີສອນຂອງພຣະອົງໂດຍປາສະຈາກຄວາມສຸກທາງຮ່າງກາຍຈະຫຼາຍກວ່າ ແລະ ສິ່ງນີ້ຈະນຳຄວາມຊື່ນຊົມມາສູ່ຂ້ານ້ອຍ ເຖິງແມ່ນວ່າຂ້ານ້ອຍຕ້ອງສູນເສຍພຣະຄຸນຂອງພຣະອົງ. ເຖິງແມ່ນພຣະຄຸນຂອງພຣະອົງບໍ່ໄດ້ຢູ່ກັບຂ້ານ້ອຍ, ຂ້ານ້ອຍກໍມີຄວາມສຸກກັບການຖືກຕີສອນ ແລະ ຖືກພິພາກສາໂດຍພຣະອົງ; ນີ້ແມ່ນການອວຍພອນທີ່ດີທີ່ສຸດຂອງພຣະອົງ, ພຣະຄຸນທີ່ດີສຸດຂອງພຣະອົງ. ເຖິງແມ່ນວ່າ ພຣະອົງສະຫງ່າງາມ ແລະ ໂກດຮ້າຍຕໍ່ຂ້ານ້ອຍຢູ່ສະເໝີ, ຂ້ານ້ອຍກໍຍັງບໍ່ສາມາດປະຖິ້ມພຣະອົງໄດ້ ແລະ ຂ້ານ້ອຍບໍ່ສາມາດຮັກພຣະອົງໄດ້ດີພໍ. ຂ້ານ້ອຍເລືອກທີ່ຈະດຳລົງຊີວິດຢູ່ໃນເຮືອນຂອງພຣະອົງ, ຂ້ານ້ອຍເລືອກທີ່ຈະຖືກສາບແຊ່ງ, ຕີສອນ ແລະ ຂ້ຽນຕີໂດຍພຣະອົງ ແລະ ບໍ່ເຕັມໃຈທີ່ຈະຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ຫຼື ຂ້ານ້ອຍເຕັມໃຈທີ່ຈະຟ້າວຟັ່ງ ແລະ ຫຍຸ້ງເຮັດນັ້ນເຮັດນີ້ໃຫ້ກັບເນື້ອໜັງເທົ່ານັ້ນ ແລະແຮງໄກທີ່ຂ້ານ້ອຍຈະເຕັມໃຈດຳລົງຊີວິດຢູ່ເພື່ອເນື້ອໜັງເລີຍ". ຄວາມຮັກຂອງເປໂຕເປັນຄວາມຮັກທີ່ບໍລິສຸດ. ນີ້ແມ່ນປະສົບການຂອງການຖືກເຮັດໃຫ້ສົມບູນ ແລະ ເປັນຂອບເຂດສູງສຸດຂອງການຖືກເຮັດໃຫ້ສົມບູນ; ບໍ່ມີຊີວິດທີ່ມີຄວາມໝາຍຫຼາຍກວ່ານີ້ອີກແລ້ວ. ເພິ່ນຍອມຮັບການຕີສອນ ແລະການພິພາກສາຂອງພຣະເຈົ້າ, ເພິ່ນຖືວ່າອຸປະນິໄສທີ່ຊອບທຳຂອງພຣະເຈົ້າເປັນສິ່ງທີ່ມີຄ່າ ແລະ ບໍ່ມີຫຍັງເລີຍກ່ຽວກັບເປໂຕທີ່ຈະມີຄ່າຫຼາຍກວ່ານີ້ອີກ. ເພິ່ນເວົ້າວ່າ "ຊາຕານມອບຄວາມຊື່ນຊົມຍິນດີທາງວັດຖຸໃຫ້ກັບຂ້ານ້ອຍ, ແຕ່ຂ້ານ້ອຍບໍ່ຖືວ່າພວກມັນມີຄ່າ. ການຕີສອນ ແລະ ການພິພາກສາຂອງພຣະເຈົ້າມາເຖິງຂ້ານ້ອຍ, ໃນສິ່ງນີ້ ຂ້ານ້ອຍຮູ້ສຶກໄດ້ຮັບພຣະຄຸນ, ໃນສິ່ງນີ້ ຂ້ານ້ອຍໄດ້ພົບຄວາມຊື່ນຊົມຍິນດີ ແລະ ໃນສິ່ງນີ້ ຂ້ານ້ອຍເປັນສຸກ. ຖ້າບໍ່ແມ່ນຍ້ອນການພິພາກສາຂອງພຣະເຈົ້າ ຂ້ານ້ອຍຈະບໍ່ຮັກພຣະເຈົ້າຈັກເທື່ອ, ຂ້ານ້ອຍຈະຍັງດຳລົງຊີວິດຢູ່ພາຍໃຕ້ການຄອບງຳຂອງຊາຕານ, ຈະຍັງຖືກມັນຄວບຄຸມ ແລະ ບັນຊາ. ຖ້າເປັນແບບນັ້ນ, ຂ້ານ້ອຍຈະບໍ່ກາຍມາເປັນມະນຸດຢ່າງແທ້ຈິງໄດ້ຈັກເທື່ອຍ້ອນຂ້ານ້ອຍບໍ່ສາມາດເຮັດໃຫ້ພຣະເຈົ້າພໍພຣະໄທໄດ້ ແລະ ບໍ່ໄດ້ອຸທິດຕົວຕົນທັງໝົດຂອງຂ້ານ້ອຍໃຫ້ກັບພຣະອົງ. ເຖິງແມ່ນພຣະເຈົ້າຈະບໍ່ອວຍພອນຂ້ານ້ອຍ, ປ່ອຍໃຫ້ຂ້ານ້ອຍປາສະຈາກຄວາມສຸກສະບາຍຢູ່ພາຍໃນ, ເໝືອນກັບວ່າມີໄຟທີ່ກຳລັງໄໝ້ຢູ່ພາຍໃນຕົວຂ້ານ້ອຍ ແລະ ບໍ່ມີສັນຕິສຸກ ແລະຄວາມສຸກ ແລະ ເຖິງແມ່ນວ່າ ການຕີສອນ ແລະ ການລົງວິໄນຂອງພຣະເຈົ້າບໍ່ເຄີຍອອກຫ່າງຂ້ານ້ອຍເລີຍ, ໃນການຕີສອນ ແລະ ການພິພາກສາຂອງພຣະອົງນັ້ນ ຂ້ານ້ອຍສາມາດເຫັນເຖິງອຸປະນິໄສທີ່ຊອບທຳຂອງພຣະອົງ. ຂ້ານ້ອຍຊື່ນຊົມໃນສິ່ງນີ້; ບໍ່ມີສິ່ງໃດທີ່ມີຄຸນຄ່າ ຫຼື ມີຄວາມໝາຍຫຼາຍກວ່ານີ້ໃນຊີວິດອີກແລ້ວ. ເຖິງແມ່ນການປົກປ້ອງ ແລະ ການດູແລຂອງພຣະອົງກາຍມາເປັນການຕີສອນ, ການພິພາກສາ, ການສາບແຊ່ງ ແລະ ການຂ້ຽນຕີທີ່ໂຫດຮ້າຍ, ຂ້ານ້ອຍກໍຍັງຈະຊື່ນຊົມຍິນດີໃນສິ່ງເຫຼົ່ານີ້ ຍ້ອນສິ່ງເຫຼົ່ານີ້ສາມາດຊຳລະລ້າງຂ້ານ້ອຍ ແລະ ປ່ຽນແປງຂ້ານ້ອຍໄດ້ດີກວ່າ, ສາມາດນຳຂ້ານ້ອຍເຂົ້າໃກ້ຊິດພຣະເຈົ້າ, ສາມາດເຮັດໃຫ້ຂ້ານ້ອຍຮັກພຣະເຈົ້າຫຼາຍຂຶ້ນ ແລະ ສາມາດເຮັດໃຫ້

ຄວາມຮັກຂອງຂ້ານ້ອຍຕໍ່ພຣະເຈົ້າບໍລິສຸດຍິ່ງຂຶ້ນ. ສິ່ງນີ້ເຮັດໃຫ້ຂ້ານ້ອຍສາມາດປະຕິບັດຕາມໜ້າທີ່ຂອງຂ້ານ້ອຍໃນຖານະທີ່ເປັນສິ່ງຊົງສ້າງ ແລະ ນໍາຂ້ານ້ອຍມາຢູ່ຕໍ່ໜ້າພຣະເຈົ້າ ແລະ ອອກຈາກອິດທິພົນຂອງຊາຕານ ເພື່ອຂ້ານ້ອຍຈະບໍ່ຮັບໃຊ້ຊາຕານອີກຕໍ່ໄປ ແລະ ຂ້ານ້ອຍຈະສາມາດອຸທິດທຸກສິ່ງທີ່ຂ້ານ້ອຍມີ ແລະ ທຸກຢ່າງທີ່ຂ້ານ້ອຍສາມາດເຮັດໄດ້ໃຫ້ກັບພຣະອົງ ໂດຍບໍ່ຢັບຢັ້ງສິ່ງໃດເລີຍ, ນັ້ນຈະເປັນເວລາທີ່ຂ້ານ້ອຍພໍໃຈຢ່າງເຕັມປ່ຽມ. ແມ່ນການຕີສອນ ແລະ ການພິພາກສາຂອງພຣະເຈົ້າທີ່ຊ່ວຍຂ້ານ້ອຍໃຫ້ລອດພົ້ນ ແລະ ຊີວິດຂອງຂ້ານ້ອຍກໍບໍ່ສາມາດແຍກອອກຈາກການຕີສອນ ແລະ ການພິພາກສາຂອງພຣະເຈົ້າໄດ້. ຊີວິດຂອງຂ້ານ້ອຍເທິງແຜ່ນດິນໂລກແມ່ນຢູ່ພາຍໃຕ້ການຄອບງຳຂອງຊາຕານ ແລະ ຖ້າບໍ່ແມ່ນຍ້ອນການດູແລ ແລະ ການປົກປ້ອງຂອງການຕີສອນ ແລະ ການພິພາກສາຂອງພຣະເຈົ້າ, ຂ້ານ້ອຍກໍຈະດຳລົງຊີວິດຢູ່ພາຍໃຕ້ການຄອບງຳຂອງຊາຕານຢູ່ສະເໝີ ແລະ ຍິ່ງໄປກວ່ານັ້ນ ຂ້ານ້ອຍຈະບໍ່ມີໂອກາດ ຫຼື ວິທີທາງທີ່ຈະດຳລົງຊີວິດທີ່ມີຄວາມໝາຍໄດ້. ມີພຽງແຕ່ການຕີສອນ ແລະ ການພິພາກສາຂອງພຣະເຈົ້າທີ່ບໍ່ເຄີຍໜີປະຂ້ານ້ອຍຈັກເທື່ອ, ຂ້ານ້ອຍຈຶ່ງສາມາດທີ່ຈະໄດ້ຮັບການຊໍາລະລ້າງໂດຍພຣະເຈົ້າ. ມີພຽງແຕ່ດ້ວຍພຣະທຳທີ່ໂຫດຮ້າຍ ແລະ ອຸປະນິໄສທີ່ຊອບທຳຂອງພຣະອົງເທົ່ານັ້ນ ແລະ ການພິພາກສາທີ່ສະຫງ່າງາມຂອງພຣະເຈົ້າ, ຂ້ານ້ອຍຈຶ່ງໄດ້ຮັບການປົກປ້ອງທີ່ສູງສຸດ ແລະ ມາດຳລົງຊີວິດຢູ່ໃນແສງສະຫວ່າງ ແລະ ໄດ້ຮັບເອົາການອວຍພອນຂອງພຣະເຈົ້າ. ການທີ່ສາມາດໄດ້ຮັບການຊໍາລະລ້າງ ແລະ ປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກຊາຕານ ແລະ ດຳລົງຊີວິດຢູ່ພາຍໃຕ້ການຄອບງຳຂອງພຣະເຈົ້າ, ນີ້ແມ່ນການອວຍພອນທີ່ຍິ່ງໃຫຍ່ສຸດໃນຊີວິດຂອງຂ້ານ້ອຍໃນປັດຈຸບັນ". ນີ້ແມ່ນຂອບເຂດສູງສຸດທີ່ເປໂຕໄດ້ຜະເຊີນ.

ນີ້ແມ່ນສະພາວະທີ່ມະນຸດຕ້ອງບັນລຸຫຼັງຈາກທີ່ຖືກເຮັດໃຫ້ສົມບູນແທ້ໆ. ຖ້າເຈົ້າບໍ່ສາມາດບັນລຸສິ່ງນີ້ຢ່າງຫຼວງຫຼາຍ, ແລ້ວເຈົ້າກໍບໍ່ສາມາດດຳລົງຊີວິດທີ່ມີຄວາມໝາຍໄດ້. ມະນຸດດຳລົງຊີວິດທ່າມກາງເນື້ອໜັງ ເຊິ່ງໝາຍຄວາມວ່າ ເຂົາດຳລົງຊີວິດໃນນະຮົກແຫ່ງມະນຸດ ແລະ ປາສະຈາກການພິພາກສາ ແລະ ການຕີສອນຂອງພຣະເຈົ້າ, ມະນຸດແມ່ນສົກກະປົກຄືກັນກັບຊາຕານ. ແລ້ວມະນຸດຈະບໍລິສຸດໄດ້ແນວໃດ? ເປໂຕເຊື່ອວ່າ ການຕີສອນ ແລະ ການພິພາກສາຈາກພຣະເຈົ້າແມ່ນການປົກປ້ອງທີ່ດີທີ່ສຸດ ແລະ ພຣະຄຸນທີ່ຍິ່ງໃຫຍ່ສຸດຂອງມະນຸດ. ມີແຕ່ຜ່ານການຕີສອນ ແລະ ການພິພາກສາຈາກພຣະເຈົ້າເທົ່ານັ້ນ ມະນຸດຈຶ່ງຈະສາມາດຕື່ນຂຶ້ນ ແລະ ກຽດຊັງເນື້ອໜັງ, ກຽດຊັງຊາຕານ. ວິໄນທີ່ເຄັ່ງຄັດຂອງພຣະເຈົ້າໄດ້ປົດປ່ອຍມະນຸດໃຫ້ເປັນອິດສະຫຼະຈາກອິດທິພົນຂອງຊາຕານ, ປົດປ່ອຍເຂົາໃຫ້ເປັນອິດສະຫຼະຈາກໂລກນ້ອຍໆຂອງເຂົາເອງ ແລະ ເຮັດໃຫ້ເຂົາດຳລົງຊີວິດຢູ່ໃນແສງສະຫວ່າງແຫ່ງການສະຖິດຂອງພຣະເຈົ້າ. ບໍ່ມີຄວາມລອດພົ້ນທີ່ດີກວ່າການຕີສອນ ແລະ ການພິພາກສາອີກແລ້ວ! ເປໂຕອະທິຖານວ່າ "ໂອ ພຣະເຈົ້າ! ຕາບໃດທີ່ພຣະອົງຕີສອນ ແລະ ພິພາກສາຂ້ານ້ອຍ, ຂ້ານ້ອຍກໍຈະຮູ້ວ່າພຣະອົງບໍ່ໄດ້ປະຖິ້ມຂ້ານ້ອຍ. ເຖິງແມ່ນວ່າພຣະອົງບໍ່ໄດ້ມອບຄວາມສຸກ ຫຼື ສັນຕິສຸກໃຫ້ກັບຂ້ານ້ອຍ ແລະ ເຮັດໃຫ້ຂ້ານ້ອຍມີຊີວິດຢູ່ດ້ວຍຄວາມທົນທຸກ ແລະ ເຮັດໃຫ້ຂ້ານ້ອຍໄດ້ຮັບການຕີສອນທີ່ນັບບໍ່ຖ້ວນ, ແຕ່ຕາບໃດທີ່ພຣະອົງບໍ່ປະຖິ້ມຂ້ານ້ອຍ ຂ້ານ້ອຍກໍຈະສະບາຍໃຈ. ໃນປັດຈຸບັນ, ການຕີສອນ

ແລະ ການພິພາກສາຂອງພຣະອົງໄດ້ກາຍມາເປັນການປົກປ້ອງທີ່ດີທີ່ສຸດຂອງຂ້ານ້ອຍ ແລະ ພຣະພອນທີ່ຍິ່ງໃຫຍ່ສຸດຂອງຂ້ານ້ອຍ. ພຣະຄຸນທີ່ພຣະອົງຊົງມອບໃຫ້ກັບຂ້ານ້ອຍປົກປ້ອງຂ້ານ້ອຍ. ພຣະຄຸນທີ່ພຣະອົງຊົງປະທານໃຫ້ກັບຂ້ານ້ອຍໃນປັດຈຸບັນແມ່ນການສຳແດງເຖິງອຸປະນິໄສທີ່ຊອບທຳຂອງພຣະອົງ ແລະ ເປັນການຕີສອນ ແລະ ການພິພາກສາ; ຍິ່ງໄປກວ່ານັ້ນ, ມັນແມ່ນການທົດລອງ ແລະ ຫຼາຍໄປກວ່ານັ້ນ ມັນແມ່ນຊີວິດແຫ່ງການທົນທຸກ". ເປໂຕສາມາດປ່ອຍວາງຄວາມສຸກທາງເນື້ອໜັງ ແລະ ສະແຫວງຫາຄວາມຮັກທີ່ເລິກເຊິ່ງຍິ່ງຂຶ້ນ ແລະ ການປົກປ້ອງທີ່ຍິ່ງໃຫຍ່ຂຶ້ນ ເພາະວ່າ ເພິ່ນໄດ້ຮັບພຣະຄຸນຢ່າງຫຼວງຫຼາຍຈາກການຕີສອນ ແລະ ການພິພາກສາຂອງພຣະເຈົ້າ. ໃນຊີວິດຂອງມະນຸດ, ຖ້າເຂົາປາຖະໜາທີ່ຈະໄດ້ຮັບການຊຳລະລ້າງ ແລະ ບັນລຸການປ່ຽນແປງໃນນິໄສຂອງເຂົາ, ຖ້າເຂົາປາຖະໜາທີ່ຈະດຳລົງຊີວິດທີ່ມີຄວາມໝາຍ ແລະ ປະຕິບັດໜ້າທີ່ຂອງເຂົາໃນຖານະທີ່ເປັນສິ່ງຊົງສ້າງ, ແລ້ວເຂົາຕ້ອງຍອມຮັບເອົາການຕີສອນ ແລະ ການພິພາກສາຂອງພຣະເຈົ້າ ແລະ ຕ້ອງບໍ່ຍອມໃຫ້ການລົງວິໄນຂອງພຣະເຈົ້າ ແລະ ການຂ້ຽນຕີຂອງພຣະເຈົ້າອອກໄປຈາກເຂົາ, ເພື່ອວ່າເຂົາອາດຈະປົດປ່ອຍຕົນເອງອອກຈາກການໃຊ້ເລ່ຫຼ່ຽມຫຼອກລວງ ແລະ ອິດທິພົນຂອງຊາຕານ ແລະ ດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະເຈົ້າ. ຈົ່ງຮູ້ວ່າ ການຕີສອນ ແລະ ການພິພາກສາຂອງພຣະເຈົ້າແມ່ນແສງສະຫວ່າງ ແລະ ເປັນແສງສະຫວ່າງແຫ່ງຄວາມລອດພົ້ນຂອງມະນຸດ ແລະ ບໍ່ມີການອວຍພອນ, ພຣະຄຸນ ຫຼື ການປົກປ້ອງທີ່ດີກວ່ານີ້ສຳລັບມະນຸດ. ມະນຸດດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຊາຕານ ແລະ ເປັນຢູ່ໃນເນື້ອໜັງ; ຖ້າເຂົາບໍ່ໄດ້ຮັບການຊຳລະລ້າງ ແລະ ບໍ່ໄດ້ຮັບເອົາການປົກປ້ອງຂອງພຣະເຈົ້າ, ແລ້ວມະນຸດກໍຈະຊົ່ວຊ້າຫຼາຍຍິ່ງຂຶ້ນ. ຖ້າເຂົາປາຖະໜາທີ່ຈະຮັກພຣະເຈົ້າ, ເຂົາກໍຕ້ອງໄດ້ຮັບການຊຳລະລ້າງ ແລະ ການຊ່ວຍໃຫ້ລອດພົ້ນ. ເປໂຕໄດ້ອະທິຖານວ່າ "ພຣະເຈົ້າ, ເມື່ອພຣະອົງຊົງປະຕິບັດຕໍ່ຂ້ານ້ອຍດ້ວຍຄວາມເມດຕາ ຂ້ານ້ອຍກໍມີຄວາມສຸກຫຼາຍ ແລະ ຮູ້ສຶກສະບາຍໃຈ; ເມື່ອພຣະອົງຕີສອນຂ້ານ້ອຍ, ຂ້ານ້ອຍຍິ່ງຮູ້ສຶກສະບາຍໃຈ ແລະ ມີຄວາມສຸກຍິ່ງຂຶ້ນ. ເຖິງແມ່ນຂ້ານ້ອຍອ່ອນແອ ແລະ ອົດກັ້ນຕໍ່ການທົນທຸກທີ່ນັບບໍ່ຖ້ວນ, ເຖິງແມ່ນມີນໍ້າຕາ ແລະ ຄວາມໂສກເສົ້າ, ພຣະອົງຊົງຮູ້ວ່າ ຄວາມໂສກເສົ້ານີ້ກໍເປັນຍ້ອນການບໍ່ເຊື່ອຟັງຂອງຂ້ານ້ອຍ ແລະ ຍ້ອນຄວາມອ່ອນແອຂອງຂ້ານ້ອຍ. ຂ້ານ້ອຍຮ້ອງໄຫ້ກໍເພາະຂ້ານ້ອຍບໍ່ສາມາດປະຕິບັດຕາມຄວາມປາຖະໜາຂອງພຣະອົງ, ຂ້ານ້ອຍຮູ້ສຶກໂສກເສົ້າ ແລະ ເສຍໃຈ ເພາະວ່າຂ້ານ້ອຍບໍ່ເໝາະສົມສຳລັບຄວາມຕ້ອງການຂອງພຣະອົງ, ແຕ່ຂ້ານ້ອຍກໍເຕັມໃຈທີ່ຈະບັນລຸຂອບເຂດນີ້, ຂ້ານ້ອຍເຕັມໃຈທີ່ຈະເຮັດທຸກສິ່ງທຸກຢ່າງທີ່ຂ້ານ້ອຍສາມາດເຮັດໄດ້ເພື່ອເຮັດໃຫ້ພຣະອົງພໍພຣະໄທ. ການຕີສອນຂອງພຣະອົງໄດ້ນຳການປົກປ້ອງມາສູ່ຂ້ານ້ອຍ ແລະ ໄດ້ມອບຄວາມລອດພົ້ນທີ່ດີທີ່ສຸດໃຫ້ກັບຂ້ານ້ອຍ; ການພິພາກສາຂອງພຣະອົງດີເລີດກວ່າຄວາມອົດກັ້ນ ແລະ ຄວາມອົດທົນຂອງພຣະອົງ. ຫາກປາສະຈາກການຕີສອນ ແລະ ການພິພາກສາຂອງພຣະອົງ, ຂ້ານ້ອຍກໍຈະບໍ່ມີຄວາມສຸກກັບຄວາມກະລຸນາ ແລະ ຄວາມຮັກຄວາມເມດຕາຂອງພຣະອົງ. ໃນປັດຈຸບັນ, ຂ້ານ້ອຍຍິ່ງເຫັນຫຼາຍຂຶ້ນວ່າ ຄວາມຮັກຂອງພຣະອົງຢູ່ເໜືອສະຫວັນ ແລະ ດີກວ່າທຸກສິ່ງທຸກຢ່າງ. ຄວາມຮັກຂອງພຣະອົງບໍ່ແມ່ນພຽງແຕ່ຄວາມກະລຸນາ ແລະ ຄວາມຮັກຄວາມ

ເມດຕາ; ຍິ່ງໄປກວ່ານັ້ນ, ມັນແມ່ນການຕີສອນ ແລະ ການພິພາກສາ. ການຕີສອນ ແລະ ການພິພາກສາຂອງພຣະອົງໄດ້ມອບຫຼາຍຢ່າງໃຫ້ກັບຂ້ານ້ອຍ. ຫາກປາສະຈາກການຕີສອນ ແລະ ການພິພາກສາຂອງພຣະອົງ, ບໍ່ມີແມ່ນແຕ່ຄົນດຽວທີ່ຈະໄດ້ຮັບການຊໍາລະລ້າງ ແລະ ບໍ່ມີແມ່ນແຕ່ຄົນດຽວທີ່ຈະສາມາດຜະເຊີນກັບຄວາມຮັກຂອງພຣະຜູ້ສ້າງ. ເຖິງແມ່ນວ່າ ຂ້ານ້ອຍໄດ້ອົດກັ້ນຕໍ່ການທົດລອງ ແລະ ຄວາມລໍາບາກຍາກແຄ້ນຫຼາຍຮ້ອຍຄັ້ງ ແລະ ເຖິງກັບວ່າເກືອບຕາຍ, ພວກມັນໄດ້ເຮັດໃຫ້ຂ້ານ້ອຍຮູ້ຈັກພຣະອົງຢ່າງແທ້ຈິງ ແລະ ໄດ້ຮັບຄວາມລອດພົ້ນຢ່າງສູງສຸດ. ຖ້າການຕີສອນ, ການພິພາກສາ ແລະ ການລົງວິໄນຂອງພຣະເຈົ້າອອກຫ່າງຈາກຂ້ານ້ອຍ, ຂ້ານ້ອຍກໍຈະດໍາລົງຊີວິດຢູ່ໃນຄວາມມືດພາຍໃຕ້ການຄອບງໍາຂອງຊາຕານ. ແລ້ວເນື້ອໜັງຂອງມະນຸດຈະມີຜົນປະໂຫຍດຫຍັງ? ຖ້າການຕີສອນ ແລະ ການພິພາກສາຂອງພຣະອົງຕ້ອງຈາກຂ້ານ້ອຍໄປ, ມັນຈະເປັນເໝືອນກັບວ່າ ພຣະວິນຍານຂອງພຣະອົງໄດ້ປະຖິ້ມຂ້ານ້ອຍ, ເໝືອນກັບວ່າ ພຣະອົງບໍ່ໄດ້ຢູ່ກັບຂ້ານ້ອຍອີກຕໍ່ໄປ. ຖ້າເປັນແບບນັ້ນ, ຂ້ານ້ອຍຈະດໍາລົງຊີວິດຕໍ່ໄປໄດ້ແນວໃດ? ຖ້າພຣະອົງມອບຄວາມເຈັບປ່ວຍໃຫ້ກັບຂ້ານ້ອຍ ແລະ ເອົາອິດສະຫຼະພາບຂອງຂ້ານ້ອຍໄປ, ຂ້ານ້ອຍສາມາດສືບຕໍ່ດໍາລົງຊີວິດໄດ້, ແຕ່ຖ້າການຕີສອນ ແລະ ການພິພາກສາຂອງພຣະອົງຕ້ອງຈາກຂ້ານ້ອຍໄປ, ຂ້ານ້ອຍກໍຈະບໍ່ມີທາງດໍາລົງຊີວິດຕໍ່ໄປໄດ້. ຖ້າຂ້ານ້ອຍປາສະຈາກການຕີສອນ ແລະ ການພິພາກສາຂອງພຣະອົງ, ຂ້ານ້ອຍກໍຈະສູນເສຍຄວາມຮັກຂອງພຣະອົງ ເຊິ່ງເປັນຄວາມຮັກທີ່ເລິກເຊິ່ງເກີນກວ່າຂ້ານ້ອຍຈະພັນລະນາໄດ້. ຫາກປາສະຈາກຄວາມຮັກຂອງພຣະອົງ, ຂ້ານ້ອຍກໍຈະດໍາລົງຊີວິດຢູ່ພາຍໃຕ້ການຄອບງໍາຂອງຊາຕານ ແລະ ຈະບໍ່ສາມາດເຫັນໃບໜ້າອັນສະຫງ່າລາສີຂອງພຣະອົງ. ແລ້ວຂ້ານ້ອຍຈະສາມາດສືບຕໍ່ດໍາລົງຊີວິດໄດ້ແນວໃດ? ຂ້ານ້ອຍບໍ່ສາມາດທົນກັບຄວາມມືດດັ່ງກ່າວ, ຊີວິດດັ່ງກ່າວ. ການທີ່ມີພຣະອົງຢູ່ກັບຂ້ານ້ອຍເປັນເໝືອນກັບການເຫັນພຣະອົງ, ແລ້ວຂ້ານ້ອຍຈະສາມາດປະຖິ້ມພຣະອົງໄດ້ແນວໃດ? ຂ້ານ້ອຍອ້ອນວອນພຣະອົງ, ຂ້ານ້ອຍຂໍຮ້ອງພຣະອົງຂໍຢ່າເອົາຄວາມສຸກສະບາຍທີ່ຍິ່ງໃຫຍ່ທີ່ສຸດຂອງຂ້ານ້ອຍນັ້ນໄປຈາກຂ້ານ້ອຍເທີດ ເຖິງແມ່ນມັນເປັນພຽງຄໍາເວົ້າສອງສາມຄໍາທີ່ເຮັດໃຫ້ໝັ້ນໃຈກໍຕາມ. ຂ້ານ້ອຍຊື່ນຊົມໃນຄວາມຮັກຂອງພຣະອົງ ແລະ ໃນປັດຈຸບັນ ຂ້ານ້ອຍບໍ່ສາມາດຢູ່ຫ່າງໄກຈາກພຣະອົງໄດ້; ແລ້ວຂ້ານ້ອຍຈະບໍ່ຮັກພຣະອົງໄດ້ແນວໃດ? ຂ້ານ້ອຍໄດ້ຫຼັ່ງນໍ້າຕາແຫ່ງຄວາມໂສກເສົ້າຫຼາຍຄັ້ງຍ້ອນຄວາມຮັກຂອງພຣະອົງ, ແຕ່ຂ້ານ້ອຍຮູ້ສຶກຢູ່ສະເໝີວ່າ ຊີວິດແບບນີ້ມີຄວາມໝາຍຍິ່ງກວ່າ, ສາມາດປັບປຸງຂ້ານ້ອຍຫຼາຍຂຶ້ນ, ສາມາດປ່ຽນແປງຂ້ານ້ອຍຫຼາຍຂຶ້ນ ແລະ ສາມາດເຮັດໃຫ້ຂ້ານ້ອຍໄດ້ຮັບຄວາມຈິງທີ່ສິ່ງຊົງສ້າງຄວນໄດ້ຮັບ”.

ຊີວິດທັງໝົດຂອງມະນຸດໄດ້ດໍາລົງຢູ່ພາຍໃຕ້ການຄອບງໍາຂອງຊາຕານ ແລະ ບໍ່ມີແມ່ນແຕ່ຄົນດຽວທີ່ສາມາດປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກອິດທິພົນຂອງຊາຕານດ້ວຍຕົວພວກເຂົາເອງ. ທຸກຄົນດໍາລົງຊີວິດຢູ່ໃນໂລກທີ່ສົກກະປົກ, ໃນຄວາມເສື່ອມຊາມ ແລະ ຄວາມວ່າງເປົ່າ, ໂດຍບໍ່ມີຄວາມໝາຍ ຫຼື ຄຸນຄ່າແມ່ນແຕ່ໜ້ອຍດຽວ; ພວກເຂົາດໍາລົງຊີວິດໂດຍປາສະຈາກຄວາມກັງວົນເພື່ອເນື້ອໜັງ, ເພື່ອຕັນຫາ ແລະ ເພື່ອຊາຕານ. ບໍ່ມີຄຸນຄ່າແມ່ນແຕ່ໜ້ອຍດຽວໃນການເປັນຢູ່ຂອງ

ພວກເຂົາ. ມະນຸດບໍ່ສາມາດຄົ້ນພົບຄວາມຈິງທີ່ຈະປົດປ່ອຍເຂົາໃຫ້ເປັນອິດສະຫຼະຈາກອິດທິພົນຂອງຊາຕານໄດ້. ເຖິງແມ່ນມະນຸດເຊື່ອໃນພຣະເຈົ້າ ແລະ ອ່ານພຣະຄຳພີ, ເຂົາກໍບໍ່ເຂົ້າໃຈວິທີການປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກການຄວບຄຸມແຫ່ງອິດທິພົນຂອງຊາຕານ. ຕະຫຼອດຍຸກຕ່າງໆ, ມີໜ້ອຍຄົນທີ່ໄດ້ຄົ້ນພົບຄວາມລັບນີ້, ມີໜ້ອຍຄົນທີ່ໄດ້ເຂົ້າໃຈມັນ. ດັ່ງນັ້ນ, ເຖິງແມ່ນວ່າມະນຸດຈະກຽດຊັງຊາຕານ ແລະ ກຽດຊັງເນື້ອໜັງ, ເຂົາກໍບໍ່ຮູ້ຈັກວິທີປົດປ່ອຍຕົນເອງໃຫ້ເປັນອິດສະຫຼະຈາກອິດທິພົນແຫ່ງບ້ວງແຮ້ວຂອງຊາຕານ. ໃນປັດຈຸບັນ, ພວກເຈົ້າຍັງບໍ່ໄດ້ຢູ່ພາຍໃຕ້ການຄອບງຳຂອງຊາຕານບໍ? ເຈົ້າບໍ່ເສຍໃຈຕໍ່ການກະທຳທີ່ບໍ່ເຊື່ອຟັງຂອງເຈົ້າ ແລະ ແລ້ວແຮງໄກທີ່ເຈົ້າຈະຮູ້ວ່າ ເຈົ້າສົກກະປົກ ແລະ ບໍ່ເຊື່ອຟັງ. ຫຼັງຈາກທີ່ຕໍ່ຕ້ານພຣະເຈົ້າ, ເຈົ້າຍິ່ງມີຈິດໃຈທີ່ສະຫງົບສຸກ ແລະ ຮູ້ສຶກມີຄວາມສະຫງົບຢ່າງໃຫຍ່. ຄວາມສະຫງົບຂອງເຈົ້າບໍ່ແມ່ນຍ້ອນເຈົ້າເສື່ອມຊາມບໍ? ຈິດໃຈທີ່ສະຫງົບສຸກນີ້ບໍ່ໄດ້ມາຈາກຄວາມບໍ່ເຊື່ອຟັງຂອງເຈົ້າບໍ? ມະນຸດດຳລົງຊີວິດຢູ່ໃນນະຣົກແຫ່ງມະນຸດ, ເຂົາດຳລົງຊີວິດຢູ່ພາຍໃຕ້ອິດທິພົນຄວາມມືດຂອງຊາຕານ; ທົ່ວດິນແດນ, ຜີຮ້າຍດຳລົງຢູ່ກັບມະນຸດ ໂດຍລ່ວງລ້ຳເນື້ອໜັງຂອງມະນຸດ. ເທິງແຜ່ນດິນໂລກ, ເຈົ້າບໍ່ໄດ້ດຳລົງຊີວິດຢູ່ໃນວິມານທີ່ສວຍງາມ. ບ່ອນທີ່ເຈົ້າຢູ່ແມ່ນອານາຈັກຂອງມານຮ້າຍ, ນະຣົກຂອງມະນຸດ, ໂລກເບື້ອງລຸ່ມ. ຖ້າມະນຸດບໍ່ຖືກຊຳລະລ້າງ, ແລ້ວເຂົາກໍຈະມີຄວາມສົກກະປົກ; ຖ້າເຂົາບໍ່ໄດ້ຮັບການປົກປ້ອງ ແລະ ດູແລໂດຍພຣະເຈົ້າ, ແລ້ວເຂົາກໍຍັງເປັນຊະເລີຍຂອງຊາຕານ; ຖ້າເຂົາບໍ່ຖືກພິພາກສາ ແລະ ຕີສອນ, ແລ້ວເຂົາກໍຈະບໍ່ມີຫົນທາງຫຼົບໜີຈາກການກົດຂີ່ຂອງອິດທິພົນມືດຂອງຊາຕານ. ນິໄສເສື່ອມຊາມທີ່ເຈົ້າສະແດງອອກມາ ແລະ ຄວາມປະພຶດທີ່ບໍ່ເຊື່ອຟັງທີ່ເຈົ້າດຳລົງຊີວິດຕາມແມ່ນພຽງພໍທີ່ຈະພິສູດໃຫ້ເຫັນວ່າ ເຈົ້າຍັງດຳລົງຊີວິດຢູ່ພາຍໃຕ້ການຄອບງຳຂອງຊາຕານ. ຖ້າຈິດໃຈ ແລະ ຄວາມຄິດຂອງເຈົ້າບໍ່ໄດ້ຮັບການຊຳລະລ້າງ ແລະ ນິໄສຂອງເຈົ້າບໍ່ໄດ້ຖືກພິພາກສາ ແລະ ຕີສອນ, ແລ້ວການເປັນຢູ່ທັງໝົດຂອງເຈົ້າກໍຈະຍັງຖືກຄວບຄຸມໂດຍການຄອບງຳຂອງຊາຕານ, ຈິດໃຈຂອງເຈົ້າຖືກຄວບຄຸມໂດຍຊາຕານ, ຄວາມຄິດຂອງເຈົ້າຖືກລໍ້ລວງໂດຍຊາຕານ ແລະ ການເປັນຢູ່ທັງໝົດຂອງເຈົ້າກໍຖືກຄວບຄຸມດ້ວຍກຳມືຂອງຊາຕານ. ເຈົ້າຮູ້ບໍ່ວ່າໃນຕອນນີ້ ເຈົ້າຢູ່ໄກສໍ່າໃດຈາກມາດຕະຖານຂອງເປໂຕ? ເຈົ້າມີຄວາມສາມາດແບບນັ້ນບໍ? ເຈົ້າຮູ້ກ່ຽວກັບການຕີສອນ ແລະ ການພິພາກສາໃນປັດຈຸບັນຫຼາຍສໍ່າໃດ? ເຈົ້າມີສິ່ງທີ່ເປໂຕຮຽນຮູ້ຫຼາຍສໍ່າໃດ? ໃນປັດຈຸບັນ, ຖ້າເຈົ້າບໍ່ສາມາດຮູ້, ເຈົ້າຈະສາມາດບັນລຸຄວາມຮູ້ນີ້ໃນອະນາຄົດໄດ້ບໍ? ຄົນທີ່ຂີ້ຄ້ານ ແລະ ຂີ້ຢ້ານຄືກັບເຈົ້າແມ່ນບໍ່ສາມາດຮູ້ຈັກການຕີສອນ ແລະ ການພິພາກສາເລີຍ. ຖ້າເຈົ້າສະແຫວງຫາສັນຕິສຸກແຫ່ງເນື້ອໜັງ ແລະ ຄວາມສຸກທາງເນື້ອໜັງ, ແລ້ວເຈົ້າກໍຈະບໍ່ມີທາງຖືກຊຳລະລ້າງໄດ້ ແລະ ໃນທີ່ສຸດ ເຈົ້າກໍຈະກັບຄືນໄປຫາຊາຕານ ຍ້ອນສິ່ງທີ່ເຈົ້າດຳລົງຊີວິດຕາມແມ່ນຊາຕານ ແລະ ມັນເປັນເນື້ອໜັງ. ດັ່ງສະພາບໃນປັດຈຸບັນ, ຫຼາຍຄົນບໍ່ສະແຫວງຫາຊີວິດ ເຊິ່ງໝາຍຄວາມວ່າ ພວກເຂົາບໍ່ສົນໃຈກ່ຽວກັບການຖືກຊຳລະລ້າງ ຫຼື ກ່ຽວກັບການເຂົ້າສູ່ປະສົບການຊີວິດທີ່ເລິກເຊິ່ງກວ່າເດີມ. ເມື່ອເປັນແບບນັ້ນ, ພວກເຂົາຈະຖືກເຮັດໃຫ້ສົມບູນໄດ້ແນວໃດ? ຄົນທີ່ບໍ່ສະແຫວງຫາຊີວິດກໍບໍ່ມີໂອກາດທີ່ຈະຖືກເຮັດໃຫ້ສົມບູນ ແລະ ຄົນທີ່ບໍ່ສະແຫວງຫາຄວາມຮູ້ກ່ຽວກັບ

ພຣະເຈົ້າ ແລະ ຄົນທີ່ບໍ່ສະແຫວງຫາການປ່ຽນແປງໃນອຸປະນິໄສຂອງພວກເຂົາ ກໍບໍ່ສາມາດຫຼົບໜີຈາກອິດທິພົນແຫ່ງຄວາມມືດຂອງຊາຕານໄດ້. ພວກເຂົາບໍ່ຈິງຈັງກັບຄວາມຮູ້ຂອງພວກເຂົາກ່ຽວກັບພຣະເຈົ້າ ແລະ ກ່ຽວກັບທາງເຂົ້າຂອງພວກເຂົາຕໍ່ການປ່ຽນແປງໃນອຸປະນິໄສຂອງພວກເຂົາ, ຄືກັບຄົນທີ່ພຽງແຕ່ເຊື່ອໃນສາສະໜາ, ຜູ້ເຊິ່ງປະຕິບັດຕາມພິທີກຳ ແລະ ເຂົ້າຮ່ວມງານຮັບໃຊ້ທີ່ເປັນປະຈຳເທົ່ານັ້ນ. ນັ້ນບໍ່ແມ່ນເສຍເວລາໄປຊື່ໆບໍ? ໃນຄວາມເຊື່ອທີ່ມະນຸດມີຕໍ່ພຣະເຈົ້າ ຖ້າເຂົາບໍ່ຈິງໃຈກ່ຽວກັບບັນຫາຊີວິດ, ບໍ່ສະແຫວງຫາທາງເຂົ້າສູ່ຄວາມຈິງ, ບໍ່ສະແຫວງຫາການປ່ຽນແປງຕໍ່ອຸປະນິໄສຂອງເຂົາ ແລ້ວແຮງໄກທີ່ຈະສະແຫວງຫາຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ, ແລ້ວເຂົາກໍຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ຖ້າເຈົ້າປາຖະໜາທີ່ຈະຖືກເຮັດໃຫ້ສົມບູນ, ແລ້ວເຈົ້າຕ້ອງເຂົ້າໃຈພາລະກິດຂອງພຣະເຈົ້າ. ໂດຍສະເພາະແລ້ວ, ເຈົ້າຕ້ອງເຂົ້າໃຈຄວາມໝາຍຂອງການຕີສອນ ແລະ ການພິພາກສາຂອງພຣະອົງ ແລະ ສາເຫດທີ່ພາລະກິດນີ້ໄດ້ຖືກປະຕິບັດຕໍ່ມະນຸດ. ເຈົ້າສາມາດຍອມຮັບບໍ່? ໃນລະຫວ່າງການຕີສອນແບບນີ້, ເຈົ້າສາມາດບັນລຸປະສົບການ ແລະ ຄວາມຮູ້ດຽວກັນກັບເປໂຕບໍ? ຖ້າເຈົ້າສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ຖ້າເຈົ້າສະແຫວງຫາການປ່ຽນແປງໃນອຸປະນິໄສຂອງເຈົ້າ, ແລ້ວເຈົ້າກໍມີໂອກາດທີ່ຈະຖືກເຮັດໃຫ້ສົມບູນ.

ສຳລັບຄົນທີ່ຈະຖືກເຮັດໃຫ້ສົມບູນ, ບາດກ້າວນີ້ຂອງພາລະກິດແຫ່ງການເອົາຊະນະແມ່ນຂາດບໍ່ໄດ້; ມີແຕ່ເມື່ອມະນຸດຖືກເອົາຊະນະເທົ່ານັ້ນ ເຂົາຈຶ່ງຈະສາມາດຜະເຊີນກັບພາລະກິດແຫ່ງການຖືກເຮັດໃຫ້ສົມບູນໄດ້. ຈະບໍ່ມີຄຸນຄ່າຍິ່ງໃຫຍ່ຫຍັງ ຖ້າມີພຽງແຕ່ການປະຕິບັດໃນບົດບາດແຫ່ງການຖືກເອົາຊະນະ ເຊິ່ງຈະບໍ່ເຮັດໃຫ້ເຈົ້າເໝາະສົມແກ່ການນຳໃຊ້ໂດຍພຣະເຈົ້າ. ເຈົ້າຈະບໍ່ມີທາງມີສ່ວນໃນການຂະຫຍາຍຂ່າວປະເສີດ, ຍ້ອນເຈົ້າບໍ່ສະແຫວງຫາຊີວິດ ແລະ ບໍ່ສະແຫວງຫາການປ່ຽນແປງ ແລະ ການຟື້ນຟູໃນຕົວເຈົ້າເອງ ແລະ ດ້ວຍເຫດນັ້ນ ເຈົ້າກໍບໍ່ມີປະສົບການທີ່ແທ້ຈິງໃນຊີວິດ. ໃນລະຫວ່າງພາລະກິດເທື່ອລະບາດກ້າວນີ້, ຄັ້ງໜຶ່ງ ເຈົ້າເຮັດໜ້າທີ່ເປັນຜູ້ໃຫ້ບໍລິການ ແລະ ເປັນຄົນຂັດຂວາງ, ແຕ່ຖ້າໃນທີ່ສຸດແລ້ວ ເຈົ້າບໍ່ສະແຫວງຫາທີ່ຈະເປັນເປໂຕ ແລະ ການສະແຫວງຫາຂອງເຈົ້າກໍບໍ່ແມ່ນຕາມເສັ້ນທາງທີ່ເປໂຕຖືກເຮັດໃຫ້ສົມບູນ, ສະນັ້ນ ໂດຍທຳມະຊາດແລ້ວ ເຈົ້າກໍຈະບໍ່ໄດ້ປະສົບກັບການປ່ຽນແປງໃນອຸປະນິໄສຂອງເຈົ້າ. ຖ້າເຈົ້າເປັນຄົນທີ່ສະແຫວງຫາເພື່ອຖືກເຮັດໃຫ້ສົມບູນ, ແລ້ວເຈົ້າກໍຈະມີຄຳພະຍານ ແລະ ເຈົ້າຈະເວົ້າວ່າ "ໃນພາລະກິດເທື່ອລະບາດກ້າວນີ້ຂອງພຣະເຈົ້າ, ຂ້ານ້ອຍໄດ້ຍອມຮັບພາລະກິດແຫ່ງການຕີສອນ ແລະ ການພິພາກສາຂອງພຣະເຈົ້າ ແລະ ເຖິງແມ່ນຂ້ານ້ອຍໄດ້ອົດກັ້ນຕໍ່ການທົນທຸກທີ່ຍິ່ງໃຫຍ່, ຂ້ານ້ອຍໄດ້ຮຽນຮູ້ເຖິງວິທີທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນ, ຂ້ານ້ອຍໄດ້ຮັບພາລະກິດທີ່ພຣະເຈົ້າປະຕິບັດ, ຂ້ານ້ອຍມີຄວາມຮູ້ກ່ຽວກັບຄວາມຊອບທຳຂອງພຣະເຈົ້າ ແລະ ການຕີສອນຂອງພຣະອົງໄດ້ຊ່ວຍຂ້ານ້ອຍໄວ້. ອຸປະນິໄສທີ່ຊອບທຳຂອງພຣະອົງໄດ້ມາເຖິງຂ້ານ້ອຍ ແລະ ນຳການອວຍພອນ ແລະ ພຣະຄຸນມາສູ່ຂ້ານ້ອຍ; ແມ່ນການພິພາກສາ ແລະ ການຕີສອນຂອງພຣະອົງທີ່ໄດ້ປົກປ້ອງ ແລະ ເຮັດໃຫ້ຂ້ານ້ອຍບໍລິສຸດ. ຖ້າຂ້ານ້ອຍບໍ່ໄດ້ຖືກຕີສອນ ແລະ ພິພາກສາໂດຍພຣະເຈົ້າ ແລະ ຖ້າພຣະທຳທີ່ຮຸນແຮງຂອງພຣະເຈົ້າບໍ່ໄດ້ມາເຖິງຂ້ານ້ອຍ, ຂ້ານ້ອຍກໍຈະບໍ່ສາມາດ

ຮູ້ຈັກພຣະເຈົ້າ ແລະ ຂ້ານ້ອຍກໍຈະບໍ່ສາມາດຮັບການຊ່ວຍເຫຼືອ. ໃນປັດຈຸບັນ, ຂ້ານ້ອຍເຫັນວ່າ: ໃນຖານະທີ່ເປັນສິ່ງຊີງສ້າງ, ຄົນໜຶ່ງບໍ່ພຽງແຕ່ຊື່ນຊົມກັບທຸກສິ່ງທີ່ພຣະຜູ້ສ້າງໄດ້ສ້າງຂຶ້ນ, ແຕ່ສິ່ງທີ່ສຳຄັນໄປກວ່ານັ້ນຄື ສິ່ງຊີງສ້າງທັງໝົດຄວນຊື່ນຊົມໃນອຸປະນິໄສທີ່ຊອບທຳຂອງພຣະເຈົ້າ ແລະ ການພິພາກສາທີ່ຊອບທຳຂອງພຣະອົງ ເພາະອຸປະນິໄສຂອງພຣະເຈົ້າສົມຄວນແກ່ຄວາມຊື່ນຊົມຂອງມະນຸດ. ໃນຖານະທີ່ເປັນສິ່ງຊີງສ້າງທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ, ຜູ້ຄົນຄວນຊື່ນຊົມກັບອຸປະນິໄສທີ່ຊອບທຳຂອງພຣະເຈົ້າ. ໃນອຸປະນິໄສທີ່ຊອບທຳຂອງພຣະອົງ ມີການຕີສອນ ແລະ ການພິພາກສາ ແລະ ຍິ່ງໄປກວ່ານັ້ນ ມີຄວາມຮັກທີ່ຍິ່ງໃຫຍ່. ເຖິງແມ່ນຂ້ານ້ອຍບໍ່ສາມາດໄດ້ຮັບຄວາມຮັກຂອງພຣະເຈົ້າຢ່າງຄົບຖ້ວນໃນປັດຈຸບັນ, ຂ້ານ້ອຍກໍໂຊກດີທີ່ໄດ້ເຫັນມັນ ແລະ ຍ້ອນສິ່ງນີ້ ຂ້ານ້ອຍຈຶ່ງເປັນສຸກ". ນີ້ແມ່ນເສັ້ນທາງທີ່ຍ່າງໂດຍຄົນທີ່ປະສົບກັບການຖືກເຮັດໃຫ້ສົມບູນ ແລະ ນີ້ແມ່ນຄວາມຮູ້ກ່ຽວກັບສິ່ງທີ່ພວກເຂົາເວົ້າ. ຄົນປະເພດດັ່ງກ່າວເປັນເໝືອນກັບເປໂຕ; ພວກເຂົາມີປະສົບດຽວກັນກັບເປໂຕ. ຄົນປະເພດດັ່ງກ່າວຍັງແມ່ນຄົນທີ່ໄດ້ຮັບຊີວິດ, ຄົນທີ່ປະກອບມີຄວາມຈິງ. ເມື່ອພວກເຂົາມີປະສົບການຈົນເຖິງເວລາສຸດທ້າຍ, ໃນລະຫວ່າງການພິພາກສາຂອງພຣະເຈົ້າ ພວກເຂົາກໍຈະປົດປ່ອຍຕົນເອງອອກຈາກອິດທິພົນຂອງຊາຕານຢ່າງສົມບູນແນ່ນອນ ແລະ ຖືກພຣະເຈົ້າຮັບເອົາ.

ຫຼັງຈາກທີ່ຜູ້ຄົນໄດ້ຖືກເອົາຊະນະ, ພວກເຂົາແມ່ນບໍ່ມີຄຳພະຍານທີ່ເດັ່ນຊັດເລີຍ. ພວກເຂົາພຽງແຕ່ເຮັດໃຫ້ຊາຕານອັບອາຍຂາຍຂີ້ໜ້າເທົ່ານັ້ນ, ແຕ່ບໍ່ໄດ້ດຳລົງຊີວິດຕາມຄວາມເປັນຈິງແຫ່ງພຣະທຳຂອງພຣະເຈົ້າ. ເຈົ້າບໍ່ໄດ້ຮັບເອົາຄວາມລອດພົ້ນຢ່າງທີສອງ; ເຈົ້າໄດ້ຮັບພຽງແຕ່ເຄື່ອງບູຊາແທນຄວາມຜິດບາບ, ແຕ່ເຈົ້າຍັງບໍ່ໄດ້ຖືກເຮັດໃຫ້ສົມບູນເທື່ອ ແລ້ວນີ້ກໍຄືການສູນເສຍທີ່ໃຫຍ່ຫຼວງ. ພວກເຈົ້າຕ້ອງເຂົ້າໃຈໃນສິ່ງທີ່ພວກເຈົ້າຄວນເຂົ້າສູ່ ແລະ ສິ່ງທີ່ຄວນດຳລົງຊີວິດຕາມ ແລະ ພວກເຈົ້າຕ້ອງເຂົ້າສູ່ສິ່ງເຫຼົ່ານັ້ນ. ໃນເວລາສຸດທ້າຍແລ້ວ ຖ້າເຈົ້າບໍ່ສາມາດໄດ້ຮັບຜົນສຳເລັດໃນການຖືກເຮັດໃຫ້ສົມບູນ ແລ້ວເຈົ້າກໍຈະບໍ່ແມ່ນມະນຸດທີ່ແທ້ຈິງ ແລະ ເຈົ້າກໍ່ຈະເຕັມໄປດ້ວຍຄວາມເສຍດາຍ. ອາດາມ ແລະ ເອວາທີ່ຖືກສ້າງໂດຍພຣະເຈົ້າໃນຕອນເລີ່ມຕົ້ນນັ້ນ ເປັນຄົນທີ່ບໍລິສຸດ ເຊິ່ງເວົ້າໄດ້ວ່າ ໃນຂະນະທີ່ຢູ່ໃນສວນເອເດັນ ພວກເຂົາບໍລິສຸດ, ບໍ່ໄດ້ມີມົນທິນຈາກຄວາມສົກກະປົກເລີຍ. ພວກເຂົາຊື່ສັດກັບພຣະເຢໂຮວາອີກດ້ວຍ ແລະ ບໍ່ຮູ້ຫຍັງເລີຍກ່ຽວກັບການຫັກຫຼັງພຣະເຢໂຮວາ. ນີ້ກໍຍ້ອນວ່າ ພວກເຂົາປາສະຈາກການລົບກວນຈາກອິດທິພົນຂອງຊາຕານ, ປາສະຈາກພິດຂອງຊາຕານ ແລະ ເປັນຄົນທີ່ບໍລິສຸດທີ່ສຸດໃນບັນດາມະນຸດຊາດ. ພວກເຂົາດຳລົງຊີວິດຢູ່ໃນສວນເອເດັນ, ບໍ່ໄດ້ຖືກເຮັດໃຫ້ເປື້ອນດ້ວຍຄວາມສົກກະປົກໃດເລີຍ, ບໍ່ໄດ້ຖືກຄອບຄອງໂດຍເນື້ອໜັງ ແລະ ເຄົາລົບບູຊາພຣະເຢໂຮວາ. ຕໍ່ມາ ເມື່ອພວກເຂົາຖືກຊາຕານລໍ້ລວງ, ພວກເຂົາຈຶ່ງມີພິດຂອງງູ ແລະ ຄວາມປາຖະໜາທີ່ຈະຫັກຫຼັງພຣະເຢໂຮວາ ແລະ ພວກເຂົາຈຶ່ງໄດ້ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຊາຕານ. ໃນຕອນເລີ່ມຕົ້ນ, ພວກເຂົາບໍລິສຸດ ແລະ ພວກເຂົາເຄົາລົບພຣະເຢໂຮວາ; ໃນສະພາວະນີ້ເທົ່ານັ້ນ ພວກເຂົາຈຶ່ງເປັນມະນຸດ. ຕໍ່ມາ, ຫຼັງຈາກທີ່ພວກເຂົາຖືກຊາຕານລໍ້ລວງ, ພວກເຂົາຈຶ່ງກິນໝາກໄມ້ຈາກຕົ້ນໄມ້ແຫ່ງການຮູ້ຈັກດີ ແລະ ຊົ່ວ ແລະ ດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຊາຕານ. ພວກເຂົາຖືກຊາຕານເຮັດ

ໃຫ້ເສື່ອມຊາມເທື່ອລະໜ້ອຍ ແລະ ສູນເສຍລັກສະນະດັ້ງເດີມຂອງມະນຸດ. ໃນຕອນເລີ່ມຕົ້ນ, ມະນຸດມີລົມຫາຍໃຈຂອງພຣະເຢໂຮວາ, ບໍ່ໄດ້ເປັນຄົນບໍ່ເຊື່ອຟັງແມ່ນແຕ່ໜ້ອຍດຽວ ແລະ ບໍ່ມີຄວາມຊົ່ວຮ້າຍຢູ່ໃນຫົວໃຈຂອງເຂົາ. ໃນເວລານັ້ນ, ມະນຸດເປັນມະນຸດຢ່າງແທ້ຈິງ. ຫຼັງຈາກທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ, ມະນຸດກໍກາຍມາເປັນສັດ. ຄວາມຄິດຂອງເຂົາເຕັມໄປດ້ວຍຄວາມຊົ່ວ ແລະ ຄວາມສົກກະປົກ, ປາສະຈາກຄວາມດີ ຫຼື ຄວາມບໍລິສຸດ. ນີ້ບໍ່ແມ່ນຊາຕານບໍ? ເຈົ້າໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າຢ່າງຫຼວງຫຼາຍ, ແຕ່ເຈົ້າກໍບໍ່ໄດ້ປ່ຽນແປງ ຫຼື ຖືກຊຳລະລ້າງ. ເຈົ້າຍັງດຳລົງຊີວິດພາຍໃຕ້ການຄອບງຳຂອງຊາຕານ ແລະ ຍັງບໍ່ຍອມຢູ່ພາຍໃຕ້ພຣະເຈົ້າ. ນີ້ແມ່ນຄົນທີ່ຖືກເອົາຊະນະແຕ່ຍັງບໍ່ໄດ້ຖືກເຮັດໃຫ້ສົມບູນ. ແລ້ວເປັນຫຍັງຈຶ່ງເວົ້າວ່າ ຄົນປະເພດດັ່ງກ່າວຍັງບໍ່ຖືກເຮັດໃຫ້ສົມບູນ? ມັນເປັນເພາະຄົນແບບນີ້ບໍ່ໄດ້ສະແຫວງຫາຊີວິດ ຫຼື ຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ ແລະ ບໍ່ໄດ້ປາຖະໜາຫຍັງເລີຍ ນອກຈາກຄວາມສຸກທາງເນື້ອໜັງ ແລະ ຄວາມສະບາຍຊົ່ວໄລຍະໜຶ່ງ. ຜົນຕາມມາກໍຄື ບໍ່ມີການປ່ຽນແປງໃນຊີວິດຈິດໃຈຂອງພວກເຂົາ ແລະ ພວກເຂົາກໍບໍ່ໄດ້ຮັບຮູບຮ່າງດັ້ງເດີມຂອງມະນຸດຕາມທີ່ຖືກສ້າງໂດຍພຣະເຈົ້ານັ້ນຄືນ. ຄົນປະເພດດັ່ງກ່າວແມ່ນຊາກສົບທີ່ຍ່າງໄດ້, ພວກເຂົາເປັນຄົນຕາຍທີ່ບໍ່ມີວິນຍານ! ຄົນທີ່ບໍ່ສະແຫວງຫາຄວາມຮູ້ກ່ຽວກັບເລື່ອງຝ່າຍວິນຍານ, ຄົນທີ່ບໍ່ສະແຫວງຫາຄວາມບໍລິສຸດ ແລະ ຄົນທີ່ບໍ່ສະແຫວງຫາເພື່ອດຳລົງຊີວິດຕາມຄວາມຈິງ, ຄົນທີ່ພໍໃຈກັບການຖືກເອົາຊະນະໃນດ້ານລົບເທົ່ານັ້ນ ແລະ ຄົນທີ່ບໍ່ສາມາດດຳລົງຊີວິດໂດຍພຣະທຳຂອງພຣະເຈົ້າ ແລະ ກາຍມາເປັນມະນຸດທີ່ບໍລິສຸດ, ຄົນເຫຼົ່ານີ້ແມ່ນຄົນທີ່ບໍ່ໄດ້ຖືກຊ່ວຍໃຫ້ລອດພົ້ນ. ຍ້ອນວ່າຖ້າເຂົາປາສະຈາກຄວາມຈິງ, ມະນຸດກໍບໍ່ສາມາດຍຶດໝັ້ນໃນລະຫວ່າງການທົດລອງຂອງພຣະເຈົ້າໄດ້; ມີພຽງແຕ່ຄົນທີ່ສາມາດຍຶດໝັ້ນໃນລະຫວ່າງການທົດລອງຂອງພຣະເຈົ້າເທົ່ານັ້ນຈຶ່ງເປັນຄົນທີ່ຖືກຊ່ວຍໃຫ້ລອດພົ້ນ. ສິ່ງທີ່ເຮົາຕ້ອງການແມ່ນຄົນທີ່ເໝືອນກັບເປໂຕ, ຄົນທີ່ສະແຫວງຫາເພື່ອຖືກເຮັດໃຫ້ສົມບູນ. ຄວາມຈິງແຫ່ງປັດຈຸບັນແມ່ນຖືກມອບໄວ້ໃຫ້ກັບຄົນທີ່ກະຫາຍຫາ ແລະ ສະແຫວງຫາມັນ. ຄວາມລອດພົ້ນນີ້ແມ່ນມີໄວ້ໃຫ້ກັບຄົນທີ່ກະຫາຍຫາເພື່ອຖືກພຣະເຈົ້າຊ່ວຍໃຫ້ລອດພົ້ນ ແລະ ບໍ່ໄດ້ມີໄວ້ເພື່ອໃຫ້ພວກເຈົ້າຮັບເອົາເທົ່ານັ້ນ. ຈຸດປະສົງຂອງມັນກໍ່ເພື່ອໃຫ້ພຣະເຈົ້າຮັບເອົາພວກເຈົ້າ; ພວກເຈົ້າຮັບເອົາພຣະເຈົ້າເພື່ອວ່າ ພຣະເຈົ້າອາດຈະຮັບເອົາພວກເຈົ້າໄດ້. ໃນປັດຈຸບັນ, ເຮົາໄດ້ກ່າວພຣະທຳເຫຼົ່ານີ້ກັບພວກເຈົ້າ ແລະ ພວກເຈົ້າກໍໄດ້ຍິນກ່ຽວກັບພຣະທຳເຫຼົ່ານັ້ນ ແລະ ພວກເຈົ້າຄວນປະຕິບັດຕາມພຣະທຳເຫຼົ່ານີ້. ໃນເວລາສຸດທ້າຍ ເວລາທີ່ພວກເຈົ້ານຳພຣະທຳເຫຼົ່ານີ້ເຂົ້າສູ່ການປະຕິບັດຈະເປັນຊ່ວງເວລາທີ່ເຮົາໄດ້ຮັບເອົາພວກເຈົ້າຜ່ານທາງພຣະທຳເຫຼົ່ານີ້; ໃນເວລາດຽວກັນ, ພວກເຈົ້າຍັງຈະໄດ້ຮັບເອົາພຣະທຳເຫຼົ່ານີ້ເຊັ່ນກັນ ເຊິ່ງເວົ້າໄດ້ວ່າ ພວກເຈົ້າຈະໄດ້ຮັບເອົາຄວາມລອດພົ້ນທີ່ສູງທີ່ສຸດ. ເມື່ອພວກເຈົ້າຖືກເຮັດໃຫ້ສະອາດ, ພວກເຈົ້າກໍຈະກາຍເປັນມະນຸດທີ່ແທ້ຈິງ. ຖ້າເຈົ້າບໍ່ສາມາດດຳລົງຊີວິດຕາມຄວາມຈິງໄດ້ ຫຼື ດຳລົງຊີວິດຄ້າຍຄືກັບຄົນທີ່ຖືກເຮັດໃຫ້ສົມບູນ, ແລ້ວສາມາດເວົ້າໄດ້ວ່າ ເຈົ້າບໍ່ແມ່ນມະນຸດ, ແຕ່ເປັນຊາກສົບທີ່ຍ່າງໄດ້ ແລະ ເປັນສັດ ເພາະເຈົ້າປາສະຈາກຄວາມຈິງເຊິ່ງໝາຍຄວາມວ່າ ເຈົ້າປາສະຈາກລົມຫາຍໃຈຂອງພຣະເຢໂຮວາ ແລະ ດ້ວຍເຫດນັ້ນ ເຈົ້າກໍເປັນຄົນ

ຕາຍທີ່ບໍ່ມີວິນຍານ! ເຖິງແມ່ນວ່າ ມັນເປັນໄປໄດ້ທີ່ຈະເປັນພະຍານຫຼັງຈາກທີ່ຖືກເອົາຊະນະ, ສິ່ງທີ່ເຈົ້າຮັບເອົາກໍເປັນພຽງແຕ່ຄວາມລອດພົ້ນທີ່ເລັກນ້ອຍ ແລະ ເຈົ້າກໍບໍ່ໄດ້ກາຍເປັນສິ່ງມີຊີວິດທີ່ປະກອບດ້ວຍວິນຍານ. ເຖິງແມ່ນວ່າ ເຈົ້າໄດ້ປະສົບກັບການຕີສອນ ແລະ ການພິພາກສາ, ຜົນກໍຄື ອຸປະນິໄສຂອງເຈົ້າບໍ່ໄດ້ຖືກຟື້ນຄືນໃໝ່ ຫຼື ຖືກປ່ຽນແປງເລີຍ; ເຈົ້າກໍຍັງເປັນຕົວຕົນເດີມຂອງເຈົ້າຄືເກົ່າ, ເຈົ້າຍັງເປັນຂອງຊາຕານ ແລະ ເຈົ້າບໍ່ໄດ້ເປັນຄົນທີ່ຖືກຊໍາລະລ້າງ. ມີພຽງແຕ່ຄົນທີ່ຖືກເຮັດໃຫ້ສົມບູນເທົ່ານັ້ນທີ່ມີຄຸນຄ່າ ແລະ ມີພຽງແຕ່ຄົນປະເພດນີ້ທີ່ໄດ້ຮັບເອົາຊີວິດທີ່ແທ້ຈິງໄດ້. ມື້ໜຶ່ງ, ບາງຄົນຈະເວົ້າກັບເຈົ້າວ່າ "ເຈົ້າໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າ, ສະນັ້ນ ເວົ້າໃຫ້ຟັງແດ່ວ່າ ພາລະກິດຂອງພຣະອົງເປັນແນວໃດ. ເດວິດໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າ ແລະ ໄດ້ເຫັນເຖິງການກະທໍາຂອງພຣະເຢໂຮວາ, ໂມເຊກໍໄດ້ເຫັນເຖິງການກະທໍາຂອງພຣະເຢໂຮວາເຊັ່ນກັນ ແລະ ພວກເຂົາທັງສອງຄົນກໍສາມາດບັນລະຍາຍເຖິງການກະທໍາຂອງພຣະເຢໂຮວາ ແລະ ສາມາດເວົ້າເຖິງຄວາມອັດສະຈັນຂອງພຣະເຢໂຮວາ. ພວກເຈົ້າໄດ້ເຫັນເຖິງພາລະກິດທີ່ພຣະເຈົ້າຜູ້ຊົງບັງເກີດເປັນມະນຸດໄດ້ປະຕິບັດໃນລະຫວ່າງຍຸກສຸດທ້າຍ; ພວກເຈົ້າສາມາດເວົ້າເຖິງສະຕິປັນຍາຂອງພຣະອົງໄດ້ບໍ? ພວກເຈົ້າສາມາດເວົ້າເຖິງຄວາມອັດສະຈັນຂອງພາລະກິດຂອງພຣະອົງໄດ້ບໍ? ພຣະເຈົ້າຮຽກຮ້ອງຫຍັງຈາກພວກເຈົ້າ ແລະ ພວກເຈົ້າຕອບສະໜອງຄວາມຮຽກຮ້ອງເຫຼົ່ານັ້ນແນວໃດ? ພວກເຈົ້າໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າໃນລະຫວ່າງຍຸກສຸດທ້າຍ, ແມ່ນຫຍັງຄືນິມິດທີ່ຍິ່ງໃຫຍ່ສຸດຂອງພວກເຈົ້າ? ພວກເຈົ້າສາມາດເວົ້າກ່ຽວກັບສິ່ງນີ້ໄດ້ບໍ? ພວກເຈົ້າສາມາດເວົ້າເຖິງອຸປະນິໄສທີ່ຊອບທໍາຂອງພຣະເຈົ້າໄດ້ບໍ?" ເຈົ້າຈະຕອບແນວໃດເມື່ອຜະເຊີນກັບຄໍາຖາມເຫຼົ່ານີ້? ຖ້າເຈົ້າເວົ້າວ່າ "ພຣະເຈົ້າຊອບທໍາຫຼາຍ, ພຣະອົງຕີສອນ, ພິພາກສາພວກເຮົາ ແລະ ເປີດໂປງພວກເຮົາຢ່າງຮຸນແຮງ; ອຸປະນິໄສຂອງພຣະເຈົ້າບໍ່ອົດກັ້ນຕໍ່ການເຮັດຜິດໂດຍມະນຸດແທ້ໆ; ຫຼັງຈາກທີ່ໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າ, ຂ້ານ້ອຍໄດ້ຮຽນຮູ້ຄວາມເປັນສັດຂອງພວກເຮົາເອງ ແລະ ຂ້ານ້ອຍໄດ້ເຫັນເຖິງອຸປະນິໄສທີ່ຊອບທໍາຂອງພຣະເຈົ້າຢ່າງແທ້ຈິງ", ແລ້ວຄົນອື່ນຈະສືບຕໍ່ຖາມເຈົ້າວ່າ "ເຈົ້າຮູ້ຫຍັງອີກແດ່ກ່ຽວກັບພຣະເຈົ້າ? ຄົນໜຶ່ງຈະເຂົ້າສູ່ຊີວິດໄດ້ແນວໃດ? ເຈົ້າມີຄວາມປາຖະໜາສ່ວນຕົວບໍ?" ເຈົ້າກໍຈະຕອບວ່າ "ຫຼັງຈາກທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ, ສິ່ງຊົງສ້າງຂອງພຣະເຈົ້າກໍກາຍມາເປັນສັດ ແລະ ບໍ່ແຕກຕ່າງຫຍັງຈາກລາ. ໃນປັດຈຸບັນ, ຂ້ານ້ອຍດໍາລົງຊີວິດຢູ່ໃນກໍາມືຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ຂ້ານ້ອຍຈຶ່ງຕ້ອງປະຕິບັດຕາມຄວາມປາຖະໜາຂອງພຣະຜູ້ສ້າງ ແລະ ຍອມເຊື່ອຟັງ ບໍ່ວ່າພຣະອົງຈະສັ່ງສອນຫຍັງກໍຕາມ. ຂ້ານ້ອຍບໍ່ມີທາງເລືອກອື່ນ". ຖ້າເຈົ້າພຽງແຕ່ເວົ້າໂດຍກວມລວມແບບນີ້, ຄົນໆນັ້ນກໍຈະບໍ່ເຂົ້າໃຈວ່າເຈົ້າກໍາລັງເວົ້າຫຍັງ. ເມື່ອພວກເຂົາຖາມເຈົ້າວ່າ ເຈົ້າມີຄວາມຮູ້ຫຍັງແດ່ກ່ຽວກັບພາລະກິດຂອງພຣະເຈົ້າ, ພວກເຂົາກໍາລັງໝາຍເຖິງປະສົບການສ່ວນຕົວຂອງເຈົ້າ. ພວກເຂົາກໍາລັງສອບຖາມວ່າ ເຈົ້າມີຄວາມຮູ້ຫຍັງແດ່ກ່ຽວກັບການຕີສອນ ແລະ ການພິພາກສາຂອງພຣະເຈົ້າ ຫຼັງຈາກທີ່ໄດ້ມີປະສົບການກັບມັນ ແລະ ໃນລັກສະນະນີ້ ພວກເຂົາກໍາລັງໝາຍເຖິງປະສົບການສ່ວນຕົວຂອງເຈົ້າ ແລະ ກໍາລັງຂໍໃຫ້ເຈົ້າເວົ້າເຖິງຄວາມຮູ້ຂອງເຈົ້າກ່ຽວກັບຄວາມຈິງ. ຖ້າເຈົ້າບໍ່ສາມາດເວົ້າສິ່ງດັ່ງກ່າວໄດ້, ມັນກໍພິສູດແລ້ວວ່າ

ເຈົ້າບໍ່ຮູ້ຫຍັງເລີຍກ່ຽວກັບພາລະກິດແຫ່ງປັດຈຸບັນ. ເຈົ້າເວົ້າເຖິງຄຳເວົ້າທີ່ເບິ່ງຄືມີເຫດຜົນຢູ່ສະເໝີ ຫຼື ຄຳເວົ້າເຊິ່ງເປັນທີ່ຮູ້ຈັກກັນທົ່ວໄປ; ເຈົ້າບໍ່ມີປະສົບການທີ່ຊັດເຈນ ແລ້ວແຮງໄກທີ່ຈະມີແກ່ນແທ້ໃນຄວາມຮູ້ຂອງເຈົ້າ ແລະ ເຈົ້າຍັງບໍ່ມີຄຳພະຍານທີ່ແທ້ຈິງ, ສະນັ້ນ ເຈົ້າກໍບໍ່ໄດ້ເຮັດໃຫ້ຄົນອື່ນໝັ້ນໃຈເລີຍ. ຢ່າເປັນຜູ້ຕິດຕາມຂອງພຣະເຈົ້າທີ່ຂີ້ຄ້ານ ແລະ ຢ່າສະແຫວງຫາສິ່ງທີ່ເຮັດໃຫ້ເຈົ້າສົງໄສ. ບໍ່ວ່າຈະໜາວ ຫຼື ຮ້ອນ ເຈົ້າຈະທຳລາຍຕົວເຈົ້າເອງ ແລະ ເຮັດໃຫ້ຊີວິດຂອງເຈົ້າລ້າຊ້າ. ເຈົ້າຕ້ອງປົດປ່ອຍຕົນເອງອອກຈາກຄວາມຂີ້ຄ້ານ ແລະ ຄວາມບໍ່ດົ້ນລົນດັ່ງກ່າວ ແລະ ມີຄວາມຊຳນານຫຼາຍຂຶ້ນໃນການສະແຫວງຫາສິ່ງທີ່ບວກ ແລະ ເອົາຊະນະຄວາມອ່ອນແອຂອງເຈົ້າເອງ ເພື່ອວ່າເຈົ້າຈະໄດ້ຮັບເອົາຄວາມຈິງ ແລະ ດຳລົງຊີວິດຕາມຄວາມຈິງ. ບໍ່ມີຫຍັງທີ່ເປັນຕາຢ້ານກ່ຽວກັບຄວາມອ່ອນແອຂອງເຈົ້າ ແລະ ຂໍ້ບົກຜ່ອງຂອງເຈົ້າກໍບໍ່ແມ່ນບັນຫາທີ່ໃຫຍ່ສຸດຂອງເຈົ້າ. ບັນຫາທີ່ໃຫຍ່ສຸດຂອງເຈົ້າ ແລະ ຂໍ້ບົກຜ່ອງທີ່ໃຫຍ່ສຸດຂອງເຈົ້າແມ່ນການທີ່ເຈົ້າບໍ່ຮູ້ຮ້ອນ ຫຼື ຮູ້ໜາວ ແລະ ການທີ່ເຈົ້າຂາດຄວາມປາຖະໜາທີ່ຈະສະແຫວງຫາຄວາມຈິງ. ບັນຫາທີ່ໃຫຍ່ສຸດກັບພວກເຈົ້າທຸກຄົນແມ່ນຄວາມຄິດທີ່ຂີ້ຢ້ານ, ເຊິ່ງເຈົ້າແມ່ນຍິນດີກັບສິ່ງທີ່ເປັນຢູ່ ແລະ ໄດ້ແຕ່ລໍຖ້າໂດຍບໍ່ດົ້ນລົນຫຍັງ. ນີ້ແມ່ນອຸປະສັກທີ່ໃຫຍ່ສຸດຂອງພວກເຈົ້າ ແລະ ສັດຕູທີ່ຍິ່ງໃຫຍ່ທີ່ສຸດໃນການສະແຫວງຫາຄວາມຈິງຂອງພວກເຈົ້າ. ຖ້າເຈົ້າມີແຕ່ເຊື່ອຟັງ ຍ້ອນພຣະທຳທີ່ເຮົາກ່າວໄວ້ນັ້ນເລິກເຊິ່ງຫຼາຍ, ເຈົ້າບໍ່ໄດ້ມີຄວາມຮູ້ຢ່າງແທ້ຈິງ ຫຼື ເຈົ້າບໍ່ຖືວ່າຄວາມຈິງເປັນສິ່ງທີ່ມີຄ່າ. ການເຊື່ອຟັງແບບເຈົ້າບໍ່ແມ່ນຄຳພະຍານ ແລະ ເຮົາກໍບໍ່ເຫັນດີກັບການເຊື່ອຟັງດັ່ງກ່າວ. ບາງຄົນອາດຖາມເຈົ້າວ່າ "ພຣະເຈົ້າຂອງເຈົ້າມາຈາກໃສແທ້? ແມ່ນຫຍັງຄືແກ່ນແທ້ຂອງພຣະເຈົ້າອົງນີ້ຂອງເຈົ້າ?" ເຈົ້າຈະຕອບວ່າ "ແກ່ນແທ້ຂອງພຣະອົງແມ່ນການຕີສອນ ແລະ ການພິພາກສາ". ແລ້ວເຂົາກໍສືບຕໍ່ກ່າວວ່າ "ພຣະເຈົ້າບໍ່ເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກກັບມະນຸດບໍ? ເຈົ້າບໍ່ຮູ້ຈັກສິ່ງນີ້ບໍ?" ເຈົ້າຈະເວົ້າວ່າ "ນັ້ນແມ່ນພຣະເຈົ້າຂອງຄົນອື່ນ. ນັ້ນແມ່ນພຣະເຈົ້າທີ່ຄົນໃນສາສະໜາເຊື່ອ ແລະ ມັນບໍ່ແມ່ນພຣະເຈົ້າຂອງພວກເຮົາ". ເມື່ອຄົນແບບເຈົ້າເຜີຍແຜ່ຂ່າວປະເສີດ, ເຈົ້າບິດເບືອນຫົນທາງທີ່ແທ້ຈິງ ແລ້ວເຈົ້າມີປະໂຫຍດຫຍັງ? ຄົນອື່ນຈະໄດ້ຮັບຫົນທາງທີ່ແທ້ຈິງຈາກເຈົ້າໄດ້ແນວໃດ? ເຈົ້າປາສະຈາກຄວາມຈິງ ແລະ ບໍ່ສາມາດເວົ້າເຖິງຄວາມຈິງເລີຍ ຫຼື ຍິ່ງໄປກວ່ານັ້ນ ເຈົ້າບໍ່ສາມາດດຳລົງຊີວິດຕາມຄວາມຈິງ. ເຈົ້າມີຄຸນສົມບັດຫຍັງທີ່ຈະດຳລົງຊີວິດຕໍ່ໜ້າພຣະເຈົ້າ? ເມື່ອເຈົ້າເຜີຍແຜ່ຂ່າວປະເສີດໃຫ້ກັບຄົນອື່ນ ແລະ ເມື່ອເຈົ້າສົນທະນາກ່ຽວກັບຄວາມຈິງ ແລະ ເປັນພະຍານໃຫ້ກັບພຣະເຈົ້າ, ຖ້າເຈົ້າບໍ່ສາມາດເຮັດໃຫ້ພວກເຂົາເຊື່ອ, ພວກເຂົາກໍຈະໂຕ້ແຍ້ງຄຳເວົ້າຂອງເຈົ້າ. ເຈົ້າບໍ່ແມ່ນຄົນທີ່ໄຮ້ຄ່າບໍ? ເຈົ້າໄດ້ຜະເຊີນກັບພາລະກິດຫຼາຍຢ່າງຂອງພຣະເຈົ້າ, ແຕ່ເມື່ອເຈົ້າເວົ້າກ່ຽວກັບຄວາມຈິງ ເຈົ້າບໍ່ມີເຫດຜົນເລີຍ. ເຈົ້າບໍ່ແມ່ນຄົນທີ່ໄຮ້ປະໂຫຍດບໍ? ເຈົ້າຈະມີປະໂຫຍດຫຍັງ? ພວກເຈົ້າມີປະສົບການກັບພາລະກິດຂອງພຣະເຈົ້າຢ່າງຫຼວງຫຼາຍ ແຕ່ບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວກ່ຽວກັບພຣະອົງໄດ້ແນວໃດ? ເມື່ອພວກເຂົາຖາມວ່າ ແມ່ນຫຍັງຄືຄວາມຮູ້ແທ້ຈິງທີ່ເຈົ້າມີກ່ຽວກັບພຣະເຈົ້າ, ເຈົ້າກໍຈະເວົ້າບໍ່ອອກ ຫຼື ບໍ່ດັ່ງນັ້ນ ເຈົ້າກໍຈະຕອບໄປດ້ວຍບາງສິ່ງທີ່ບໍ່ກ່ຽວຂ້ອງກັບເລື່ອງທີ່ກຳລັງເວົ້າຢູ່ເລີຍ ຄືການເວົ້າວ່າ ພຣະເຈົ້າຍິ່ງໃຫຍ່, ການອວຍພອນທີ່

ຍິ່ງໃຫຍ່ທີ່ເຈົ້າໄດ້ຮັບແມ່ນການສັນລະເສີນພຣະເຈົ້າຢ່າງແທ້ຈິງ ແລະ ບໍ່ມີສິດພິເສດໃດທີ່ຍິ່ງໃຫຍ່ກວ່າການທີ່ໄດ້ເຫັນພຣະເຈົ້າດ້ວຍຕົນເອງ. ການເວົ້າແບບນີ້ຈະມີຄຸນຄ່າຫຍັງ? ສິ່ງເຫຼົ່ານີ້ເປັນຄຳເວົ້າທີ່ໄຮ້ປະໂຫຍດ ແລະ ວ່າງເປົ່າ! ເມື່ອໄດ້ພະເຊີນກັບພາລະກິດຫຼາຍຢ່າງຂອງພຣະເຈົ້າ, ເຈົ້າຮູ້ພຽງແຕ່ວ່າການສັນລະເສີນພຣະເຈົ້ານັ້ນແມ່ນຄວາມຈິງບໍ? ເຈົ້າຕ້ອງຮູ້ຈັກພາລະກິດຂອງພຣະເຈົ້າ ແລະ ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະເປັນພະຍານທີ່ແທ້ຈິງໃຫ້ກັບພຣະເຈົ້າໄດ້. ຄົນທີ່ບໍ່ໄດ້ຮັບຄວາມຈິງຈະສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້ແນວໃດ?

ຖ້າພາລະກິດຫຼາຍຢ່າງ ແລະ ພຣະທຳຫຼາຍຂໍ້ບໍ່ມີຜົນກະທົບຫຍັງກັບເຈົ້າເລີຍ, ແລ້ວເມື່ອເວລາແຫ່ງການເຜີຍແຜ່ພາລະກິດຂອງພຣະເຈົ້າມາເຖິງ ເຈົ້າກໍຈະບໍ່ສາມາດປະຕິບັດໜ້າທີ່ຂອງເຈົ້າໄດ້ ແລະຈະອັບອາຍ ແລະ ເສຍໜ້າ. ໃນເວລານັ້ນ, ເຈົ້າຈະຮູ້ສຶກວ່າ ເຈົ້າເປັນໜີ້ພຣະເຈົ້າຫຼາຍ, ຄວາມຮູ້ຂອງເຈົ້າກ່ຽວກັບພຣະເຈົ້າແມ່ນຕື້ນຫຼາຍ. ຖ້າເຈົ້າບໍ່ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າໃນປັດຈຸບັນໃນຂະນະທີ່ພຣະອົງປະຕິບັດພາລະກິດ, ແລ້ວຕໍ່ໄປ ມັນກໍຈະຊ້າເກີນໄປ. ໃນເວລາສຸດທ້າຍ, ເຈົ້າຈະບໍ່ມີຄວາມຮູ້ຫຍັງໃຫ້ກ່າວເຖິງເລີຍ, ເຈົ້າຈະມີແຕ່ຄວາມວ່າງເປົ່າ ແລະ ບໍ່ມີຫຍັງເລີຍ. ແລ້ວເຈົ້າຈະໃຊ້ຫຍັງເພື່ອເລົ່າເລື່ອງໃຫ້ກັບພຣະເຈົ້າ? ເຈົ້າກ້າທີ່ຈະຫຼຽວເບິ່ງພຣະເຈົ້າບໍ? ເຈົ້າຄວນສະແຫວງຫາຢ່າງໜັກໃນຕອນນີ້ ເພື່ອວ່າໃນເວລາສຸດທ້າຍ ເຈົ້າຈະເປັນຄືກັບເປໂຕທີ່ຮູ້ຈັກວ່າ ການຕີສອນ ແລະ ການພິພາກສາຂອງພຣະເຈົ້າມີປະໂຫຍດຫຼາຍສໍ່າໃດກັບມະນຸດ ແລະ ຫາກປາສະຈາກການຕີສອນ ແລະ ການພິພາກສາຂອງພຣະອົງ ມະນຸດກໍບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ ແລະ ມີພຽງແຕ່ຈະຈົມລົງເລິກສູ່ດິນແດນທີ່ສົກກະປົກນີ້, ຈົມລົງເລິກສູ່ຂີ້ຕົມຫຼາຍຍິ່ງຂຶ້ນ. ຜູ້ຄົນຖືກຊາຕານເຮັດໃຫ້ເສື່ອມຊາມ, ວາງແຜນຕໍ່ຕ້ານກັນເອງ ແລະ ດູຖູກລັງກຽດກັນເອງ, ສູນເສຍຄວາມຢຳເກງພຣະເຈົ້າ. ການບໍ່ເຊື່ອຟັງຂອງພວກເຂົາກໍໃຫຍ່ຫຼວງເກີນໄປ, ແນວຄິດຂອງພວກເຂົາມີຫຼາຍເກີນໄປ ແລະ ທຸກຢ່າງກໍເປັນຂອງຊາຕານ. ຫາກປາສະຈາກການຕີສອນ ແລະ ການພິພາກສາຂອງພຣະເຈົ້າ, ອຸປະນິໄສທີ່ເສື່ອມຊາມຂອງມະນຸດຈະບໍ່ສາມາດຖືກຊຳລະລ້າງ ແລະ ເຂົາຈະບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ສິ່ງທີ່ຖືກສຳແດງໂດຍພາລະກິດຂອງພຣະເຈົ້າຜູ້ຊົງບັງເກີດເປັນມະນຸດ ແມ່ນສິ່ງທີ່ຖືກສຳແດງໂດຍພຣະວິນຍານຢ່າງແນ່ນອນ ແລະ ພາລະກິດທີ່ພຣະອົງກະທຳແມ່ນຖືກປະຕິບັດຕາມສິ່ງທີ່ພຣະວິນຍານບໍລິສຸດກະທຳ. ໃນປັດຈຸບັນ, ຖ້າເຈົ້າບໍ່ມີຄວາມຮູ້ກ່ຽວກັບພາລະກິດນີ້, ແລ້ວເຈົ້າກໍໂງ່ຈ້າຫຼາຍ ແລະ ໄດ້ສູນເສຍຫຼາຍຢ່າງ! ຖ້າເຈົ້າບໍ່ໄດ້ຮັບເອົາຄວາມລອດພົ້ນຂອງພຣະເຈົ້າ, ແລ້ວຄວາມເຊື່ອຂອງເຈົ້າກໍເປັນຄວາມເຊື່ອໃນສາສະໜາ ແລະ ເຈົ້າກໍເປັນຄຣິສຕຽນ ເຊິ່ງເປັນຄົນແຫ່ງສາສະໜາ. ເພາະວ່າເຈົ້າຍຶດໝັ້ນກັບຄຳສັ່ງສອນທີ່ຕາຍແລ້ວ, ເຈົ້າໄດ້ສູນເສຍພາລະກິດໃໝ່ຂອງພຣະວິນຍານບໍລິສຸດ; ຄົນອື່ນທີ່ສະແຫວງຫາຄວາມຮັກຕໍ່ພຣະເຈົ້າ ສາມາດໄດ້ຮັບຄວາມຈິງ ແລະ ຊີວິດ, ໃນຂະນະທີ່ຄວາມເຊື່ອຂອງເຈົ້າບໍ່ສາມາດໄດ້ຮັບການເຫັນດີຂອງພຣະເຈົ້າ. ກົງກັນຂ້າມ, ເຈົ້າໄດ້ກາຍມາເປັນຄົນທີ່ເຮັດຊົ່ວ, ເປັນຄົນທີ່ສ້າງຄວາມຈິບຫາຍ ແລະ ເປັນຕາກຽດຊັງ; ເຈົ້າໄດ້ກາຍມາເປັນຕົວຕະຫຼົກຂອງຊາຕານ ແລະ ຊະເລີຍຂອງຊາຕານ. ພຣະເຈົ້າບໍ່ແມ່ນມີໃຫ້ມະນຸດເຊື່ອ, ແຕ່ມີໃຫ້ເຂົາຮັກ, ໃຫ້ເຂົາສະແຫວງຫາ ແລະ

ນະມັດສະການ. ຖ້າເຈົ້າບໍ່ສະແຫວງຫາໃນປັດຈຸບັນ, ແລ້ວມື້ນັ້ນກໍຈະມາເຖິງ ມື້ທີ່ເຈົ້າເວົ້າວ່າ "ແຕ່ກ່ອນ ເປັນຫຍັງຂ້ານ້ອຍຈຶ່ງບໍ່ຕິດຕາມພຣະເຈົ້າຢ່າງເໝາະສົມ, ບໍ່ເຮັດໃຫ້ພຣະອົງພໍໃຈໂດຍສົມຄວນ, ບໍ່ສະແຫວງຫາການປ່ຽນແປງໃນຊີວິດຈິດໃຈຂອງຂ້ານ້ອຍ? ຂ້ານ້ອຍເສຍດາຍທີ່ບໍ່ສາມາດຍອມຢູ່ພາຍໃຕ້ພຣະເຈົ້າໃນເວລານັ້ນ ແລະ ບໍ່ສະແຫວງຫາຄວາມຮູ້ກ່ຽວກັບພຣະທຳຂອງພຣະເຈົ້າ. ພຣະເຈົ້າກ່າວຫຼາຍສິ່ງໃນຕອນນັ້ນ; ຂ້ານ້ອຍບໍ່ສະແຫວງຫາໄດ້ແນວໃດ? ຂ້ານ້ອຍໂງ່ຫຼາຍ!" ເຈົ້າຈະກຽດຊັງຕົນເອງຈົນຮອດລະດັບໃດໜຶ່ງ. ໃນປັດຈຸບັນ, ເຈົ້າບໍ່ເຊື່ອພຣະທຳທີ່ເຮົາກ່າວ ແລະ ເຈົ້າບໍ່ສົນໃຈກັບພຣະທຳເຫຼົ່ານັ້ນ; ເມື່ອມື້ແຫ່ງການເຜີຍແຜ່ພາລະກິດນີ້ມາເຖິງ ແລະ ເຈົ້າຈະເຫັນຄວາມບໍລິບູນໃນພຣະທຳນີ້, ເຈົ້າຈະເສຍດາຍ ແລະ ໃນເວລານັ້ນ ເຈົ້າກໍຈະຕົກສະເງີ້. ມີການອວຍພອນ, ແຕ່ເຈົ້າບໍ່ຮູ້ຈັກຮັບເອົາພອນເຫຼົ່ານັ້ນ ແລະ ມີຄວາມຈິງ, ແຕ່ເຈົ້າບໍ່ສະແຫວງຫາມັນ. ເຈົ້າບໍ່ໄດ້ນຳເອົາການດູຖູກມາສູ່ຕົນເອງບໍ? ໃນປັດຈຸບັນ, ເຖິງແມ່ນວ່າ ບາດກ້າວຕໍ່ໄປໃນພາລະກິດຂອງພຣະເຈົ້າຍັງບໍ່ໄດ້ເລີ່ມຕົ້ນເທື່ອ, ບໍ່ມີຫຍັງທີ່ພິເສດກ່ຽວກັບການຮຽກຮ້ອງໃນຕົວເຈົ້າ ແລະ ສິ່ງທີ່ເຈົ້າຖືກຮຽກຮ້ອງໃຫ້ດຳລົງຊີວິດຕາມ. ມີພາລະກິດຢ່າງຫຼວງຫຼາຍ ແລະ ຄວາມຈິງຫຼາຍຢ່າງ; ແລ້ວສິ່ງເຫຼົ່ານັ້ນບໍ່ສົມຄວນທີ່ຈະໃຫ້ເຈົ້າຮູ້ບໍ? ການຕີສອນ ແລະ ການພິພາກສາຂອງພຣະເຈົ້າບໍ່ສາມາດປຸກວິນຍານຂອງເຈົ້າໃຫ້ຕື່ນໄດ້ບໍ? ການຕີສອນ ແລະ ການພິພາກສາຂອງພຣະເຈົ້າບໍ່ສາມາດເຮັດໃຫ້ເຈົ້າກຽດຊັງຕົນເອງໄດ້ບໍ? ເຈົ້າພໍໃຈທີ່ຈະດຳລົງຊີວິດພາຍໃຕ້ອິດທິພົນຂອງຊາຕານຢ່າງສັນຕິສຸກ ແລະ ດ້ວຍຄວາມປິຕິຍິນດີ ແລະ ຄວາມສະບາຍໃຈທາງເນື້ອໜັງທີ່ເລັກນ້ອຍນັ້ນບໍ? ເຈົ້າບໍ່ແມ່ນຄົນທີ່ຕ້ອຍຕ່ຳທີ່ສຸດໃນບັນດາຜູ້ຄົນບໍ? ບໍ່ມີໃຜທີ່ໂງ່ກວ່າຄົນທີ່ໄດ້ເຫັນຄວາມລອດພົ້ນ ແຕ່ບໍ່ສະແຫວງຫາທີ່ຈະຮັບເອົາມັນ; ຜູ້ຄົນເຫຼົ່ານີ້ຍຶດຕິດຢູ່ກັບຝ່າຍເນື້ອໜັງ ແລະ ມີຄວາມສຸກກັບຊາຕານ. ເຈົ້າຫວັງວ່າ ຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າຈະບໍ່ສິ່ງຜົນໃຫ້ມີການທ້າທາຍ ຫຼື ຄວາມຍາກລຳບາກ ຫຼື ຄວາມຫຍຸ້ງຍາກແມ່ນແຕ່ໜ້ອຍດຽວ. ເຈົ້າສະແຫວງຫາສິ່ງທີ່ບໍ່ມີຄ່າຢູ່ສະເໝີ ແລະ ເຈົ້າບໍ່ໃຫ້ຄຸນຄ່າກັບຊີວິດ, ກົງກັນຂ້າມ ເຈົ້າຖືເອົາຄວາມຄິດທີ່ເກີນເຫດຜົນຂອງເຈົ້າເອງຫຼາຍກວ່າຄວາມຈິງ. ເຈົ້າຊ່າງໄຮ້ຄ່າຫຼາຍ! ເຈົ້າດຳລົງຊີວິດຄືກັບໝູ ແລ້ວແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງເຈົ້າ, ໝູ ແລະ ໝາ? ທຸກຄົນທີ່ບໍ່ສະແຫວງຫາຄວາມຈິງ ແລະ ກົງກັນຂ້າມຄືຮັກເນື້ອໜັງ ບໍ່ແມ່ນສັດບໍ? ຄົນຕາຍແລ້ວທີ່ປາສະຈາກວິນຍານບໍ່ແມ່ນຊາກສົບທີ່ຍ່າງໄດ້ບໍ? ມີພຣະທຳຫຼາຍສໍ່າໃດທີ່ໄດ້ກ່າວໄວ້ທ່າມກາງພວກເຈົ້າ? ມີພຽງແຕ່ພາລະກິດເລັກນ້ອຍບໍທີ່ຖືກປະຕິບັດທ່າມກາງພວກເຈົ້າ? ເຮົາໄດ້ຈັດກຽມທ່າມກາງພວກເຈົ້າຫຼາຍສໍ່າໃດ? ສະນັ້ນ ເປັນຫຍັງເຈົ້າຈຶ່ງຍັງບໍ່ຮັບເອົາມັນ? ເຈົ້າມີຫຍັງທີ່ຕ້ອງຕໍ່ວ່າບໍ? ເຫດຜົນທີ່ເຈົ້າບໍ່ໄດ້ຮັບຫຍັງເລີຍ ບໍ່ແມ່ນເພາະວ່າເຈົ້າຮັກເນື້ອໜັງຫຼາຍເກີນໄປບໍ? ແລ້ວບໍ່ແມ່ນຍ້ອນຄວາມຄິດຂອງເຈົ້າເກີນຂອບເຂດຫຼາຍໄປບໍ? ບໍ່ແມ່ນຍ້ອນເຈົ້າໂງ່ເກີນໄປບໍ? ຖ້າເຈົ້າສາມາດໄດ້ຮັບການອວຍພອນເຫຼົ່ານີ້ໄດ້, ແລ້ວເຈົ້າຈະໂທດພຣະເຈົ້າ ຍ້ອນບໍ່ໄດ້ຊ່ວຍເຈົ້າໃຫ້ລອດພົ້ນໄດ້ບໍ? ສິ່ງທີ່ເຈົ້າສະແຫວງຫາແມ່ນເພື່ອສາມາດຮັບສັນຕິສຸກຫຼັງຈາກທີ່ເຊື່ອໃນພຣະເຈົ້າ ຄືໃຫ້ລູກຂອງເຈົ້າເປັນອິດສະຫຼະຈາກຄວາມເຈັບປ່ວຍ, ໃຫ້ສາມີຂອງເຈົ້າມີອາຊີບທີ່ດີ, ໃຫ້ລູກຊາຍຂອງເຈົ້າພົບພັນລະຍາທີ່ດີ, ໃຫ້ລູກສາວຂອງເຈົ້າພົບສາມີທີ່ເໝາະສົມ, ໃຫ້

ງົວ ແລະ ມ້າຂອງເຈົ້າຄາດດີນໄດ້ດີ, ໃຫ້ປີທີ່ມີສະພາບອາກາດດີສຳລັບພືນປູກຂອງເຈົ້າ. ນີ້ແມ່ນສິ່ງທີ່ເຈົ້າສະແຫວງຫາ. ການສະແຫວງຫາຂອງເຈົ້າແມ່ນພຽງແຕ່ການດຳລົງຊີວິດຢ່າງສະບາຍ, ເພື່ອບໍ່ໃຫ້ເກີດອຸປະຕິເຫດກັບຄອບຄົວຂອງເຈົ້າ, ໃຫ້ລົມພັດຜ່ານເຈົ້າໄປ, ເພື່ອໃຫ້ໃບໜ້າຂອງເຈົ້າບໍ່ຖືກພັດດ້ວຍເມັດດິນຊາຍ, ເພື່ອໃຫ້ພືນປູກຂອງຄອບຄົວຂອງເຈົ້າບໍ່ຖືກນໍ້າຖ້ວມ, ເພື່ອໃຫ້ເຈົ້າບໍ່ໄດ້ຜົນກະທົບຈາກໄພພິບັດໃດໆ, ເພື່ອດຳລົງຊີວິດໃນອ້ອມກອດຂອງພຣະເຈົ້າ, ເພື່ອດຳລົງຊີວິດໃນເຮືອນຮັງທີ່ອົບອຸ່ນ ແລະ ສະບາຍ. ຄົນຂີ້ຢ້ານແບບເຈົ້າ ຜູ້ເຊິ່ງສະແຫວງຫາເນື້ອໜັງຢູ່ສະເໝີ ເຈົ້າມີຫົວໃຈບໍ, ເຈົ້າມີວິນຍານບໍ? ເຈົ້າບໍ່ແມ່ນສັດບໍ? ເຮົາມອບຫົນທາງທີ່ແທ້ຈິງໃຫ້ກັບເຈົ້າໂດຍບໍ່ຮຽກຮ້ອງຫຍັງເປັນການຕອບແທນ, ແຕ່ເຈົ້າກໍບໍ່ສະແຫວງຫາ. ເຈົ້າເປັນໜຶ່ງໃນຄົນທີ່ເຊື່ອໃນພຣະເຈົ້າບໍ? ເຮົາປະທານຊີວິດມະນຸດທີ່ແທ້ຈິງໃຫ້ກັບເຈົ້າ, ແຕ່ເຈົ້າກໍບໍ່ສະແຫວງຫາ. ເຈົ້າບໍ່ໄດ້ແຕກຕ່າງຫຍັງຈາກໝູ ຫຼື ໝາບໍ? ໝູບໍ່ສະແຫວງຫາຊີວິດຂອງມະນຸດ, ພວກມັນບໍ່ສະແຫວງຫາເພື່ອຖືກຊໍາລະລ້າງ ແລະ ພວກມັນບໍ່ເຂົ້າໃຈວ່າ ຊີວິດແມ່ນຫຍັງ. ໃນແຕ່ລະມື້ ຫຼັງຈາກທີ່ກິນອີ່ມແລ້ວ, ພວກມັນກໍຈະມີແຕ່ນອນ. ເຮົາມອບຫົນທາງທີ່ແທ້ຈິງ, ແຕ່ເຈົ້າບໍ່ໄດ້ຮັບເອົາມັນ ນັ້ນຄື: ເຈົ້າມີແຕ່ມືເປົ່າ. ເຈົ້າເຕັມໃຈທີ່ຈະສືບຕໍ່ກັບຊີວິດແບບນີ້ບໍ ເຊິ່ງເປັນຊີວິດຂອງໝູ? ແມ່ນຫຍັງຄືຄວາມໝາຍທີ່ຄົນປະເພດນີ້ມີຊີວິດຢູ່? ຊີວິດຂອງເຈົ້າເປັນຕາລັງກຽດ ແລະ ເປັນຕາໜ້າອັບອາຍ, ເຈົ້າດຳລົງຊີວິດທ່າມກາງຄວາມສົກກະປົກ ແລະ ມີຕັນຫາຫຼາຍ ແລະ ເຈົ້າບໍ່ສະແຫວງຫາເປົ້າໝາຍໃດເລີຍ; ຊີວິດຂອງເຈົ້າບໍ່ແມ່ນຊີວິດທີ່ເປັນຕາໜ້າອັບອາຍທີ່ສຸດເລີຍບໍ? ເຈົ້າກ້າທີ່ຈະຫຼຽວເບິ່ງພຣະເຈົ້າຢູ່ບໍ? ຖ້າເຈົ້າສືບຕໍ່ມີປະສົບການໃນລັກສະນະນີ້, ເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ? ຫົນທາງທີ່ແທ້ຈິງຖືກມອບໃຫ້ກັບເຈົ້າແລ້ວ, ແຕ່ໃນທີ່ສຸດ ເຈົ້າຈະສາມາດຮັບເອົາມັນໄດ້ ຫຼື ບໍ່ ແມ່ນຂຶ້ນກັບການສະແຫວງຫາສ່ວນຕົວຂອງເຈົ້າເອງ. ຜູ້ຄົນເວົ້າວ່າ ພຣະເຈົ້າເປັນພຣະເຈົ້າທີ່ຊອບທຳ ແລະ ຕາບໃດທີ່ມະນຸດຕິດຕາມພຣະອົງຈົນເຖິງເວລາສຸດທ້າຍ, ພຣະອົງກໍຈະບໍ່ລຳອຽງຕໍ່ມະນຸດຢ່າງແນ່ນອນ ຍ້ອນວ່າພຣະອົງຊອບທຳທີ່ສຸດ. ຖ້າມະນຸດຕິດຕາມພຣະອົງຈົນເຖິງເວລາສຸດທ້າຍ, ແລ້ວພຣະອົງຈະສາມາດປະຖິ້ມມະນຸດໄດ້ບໍ? ເຮົາບໍ່ລຳອຽງຕໍ່ມະນຸດທັງໝົດ ແລະ ພິພາກສາມະນຸດທຸກຄົນດ້ວຍອຸປະນິໄສທີ່ຊອບທຳຂອງເຮົາ, ແຕ່ມີສະພາບການທີ່ເໝາະສົມໃນສິ່ງທີ່ເຮົາຮຽກຮ້ອງຈາກມະນຸດ ແລະ ສິ່ງທີ່ເຮົາຮຽກຮ້ອງກໍຕ້ອງຖືກເຮັດໃຫ້ສຳເລັດໂດຍມະນຸດທຸກຄົນ ບໍ່ວ່າພວກເຂົາຈະເປັນໃຜກໍຕາມ. ເຮົາບໍ່ສົນໃຈວ່າ ຄຸນສົມບັດຂອງເຈົ້າເປັນແນວໃດ ຫຼື ເຈົ້າມີຄຸນສົມບັດເຫຼົ່ານັ້ນດົນສໍ່າໃດ; ເຮົາສົນໃຈພຽງແຕ່ວ່າ ເຈົ້າຍ່າງໃນຫົນທາງຂອງເຮົາ ຫຼື ບໍ່ ແລະ ເຈົ້າຮັກ ແລະ ກະຫາຍຫາຄວາມຈິງ ຫຼື ບໍ່. ຖ້າເຈົ້າຂາດຄວາມຈິງ ແລະ ກົງກັນຂ້າມ ນຳຄວາມອັບອາຍມາສູ່ພຣະນາມຂອງເຮົາ ແລະ ບໍ່ປະຕິບັດຕາມຫົນທາງຂອງເຮົາ, ພຽງແຕ່ປະຕິບັດໂດຍບໍ່ສົນໃຈ ຫຼື ກັງວົນຫຍັງເລີຍ, ແລ້ວໃນເວລານັ້ນ ເຮົາຈະຕີເຈົ້າຈົນລົ້ມລົງ ແລະ ລົງໂທດເຈົ້າສຳລັບຄວາມຊົ່ວຮ້າຍຂອງເຈົ້າ ແລ້ວຕອນນັ້ນເຈົ້າຈະເວົ້າແກ້ຕົວແນວໃດ? ເຈົ້າຈະສາມາດເວົ້າໄດ້ວ່າ ພຣະເຈົ້າບໍ່ຊອບທຳໄດ້ບໍ? ໃນປັດຈຸບັນ, ຖ້າເຈົ້າປະຕິບັດຕາມພຣະທຳທີ່ເຮົາກ່າວໄວ້, ແລ້ວເຈົ້າກໍເປັນຄົນປະເພດທີ່ເຮົາເຫັນດີນຳ. ເຈົ້າເວົ້າວ່າ ເຈົ້າໄດ້ທົນທຸກຢູ່ສະເໝີໃນຂະນະທີ່ຕິດຕາມພຣະເຈົ້າ, ເຈົ້າໄດ້ຕິດຕາມພຣະອົງຜ່ານ

ຮ້ອນຜ່ານໜາວ ແລະ ໄດ້ແບ່ງປັນເວລາທີ່ດີ ແລະ ບໍ່ດີກັບພຣະອົງ, ແຕ່ເຈົ້າບໍ່ໄດ້ດຳລົງຊີວິດຕາມພຣະທຳທີ່ພຣະເຈົ້າກ່າວໄວ້ເລີຍ; ເຈົ້າພຽງແຕ່ປາຖະໜາທີ່ຈະເຮັດນັ້ນເຮັດນີ້ໃຫ້ພຣະເຈົ້າ ແລະ ເສຍສະຫຼະຕົນເອງໃຫ້ກັບພຣະເຈົ້າໃນແຕ່ລະມື້ ແລະ ບໍ່ເຄີຍຄິດທີ່ຈະດຳລົງຊີວິດທີ່ມີຄວາມໝາຍ. ເຈົ້າຍັງເວົ້າວ່າ "ໃນກໍລະນີໃດກໍຕາມ, ຂ້ານ້ອຍເຊື່ອວ່າ ພຣະເຈົ້າຊອບທຳ. ຂ້ານ້ອຍໄດ້ທົນທຸກເພື່ອພຣະອົງ, ແລ່ນໄປມາເພື່ອພຣະອົງ ແລະ ອຸທິດຕົນເອງໃຫ້ກັບພຣະອົງ ແລະ ຂ້ານ້ອຍໄດ້ເຮັດວຽກໜັກ ເຖິງແມ່ນວ່າຈະບໍ່ໄດ້ຮັບການຮັບຮູ້ໃດເລີຍ; ພຣະອົງຈະຈື່ຂ້ານ້ອຍຢ່າງແນ່ນອນ". ເປັນຄວາມຈິງທີ່ວ່າພຣະເຈົ້າຊອບທຳ, ແຕ່ຄວາມຊອບທຳນີ້ບໍ່ໄດ້ມີມົນທິນຈາກຄວາມບໍ່ບໍລິສຸດເລີຍ ນັ້ນຄື: ມັນບໍ່ມີຄວາມປະສົງຂອງມະນຸດ ແລະ ມັນບໍ່ໄດ້ມີມົນທິນຈາກເນື້ອໜັງ ຫຼື ໂດຍການຈັດການຂອງມະນຸດ. ທຸກຄົນທີ່ເປັນປໍລະປັກ ແລະ ຕໍ່ຕ້ານ ແລະ ທຸກຄົນທີ່ບໍ່ປະຕິບັດຕາມຫົນທາງຂອງພຣະອົງຈະຖືກລົງໂທດ; ບໍ່ມີໃຜໄດ້ຮັບການອະໄພໂທດ ແລະ ບໍ່ມີໃຜໄດ້ຮັບການລະເວັ້ນ! ບາງຄົນເວົ້າວ່າ "ໃນປັດຈຸບັນ, ຂ້ານ້ອຍແລ່ນໄປມາເພື່ອພຣະອົງ; ເມື່ອເວລາສຸດທ້າຍມາເຖິງ ພຣະອົງມອບການອວຍພອນເລັກນ້ອຍໃຫ້ກັບຂ້ານ້ອຍໄດ້ບໍ?" ແລ້ວເຮົາຈະຖາມເຈົ້າວ່າ "ເຈົ້າໄດ້ປະຕິບັດຕາມພຣະທຳຂອງເຮົາແລ້ວບໍ?" ຄວາມຊອບທຳທີ່ເຈົ້າເວົ້າເຖິງແມ່ນອີງຕາມການຈັດການຂອງມະນຸດ. ເຈົ້າຄິດພຽງແຕ່ວ່າເຮົາຊອບທຳ ແລະ ບໍ່ລຳອຽງຕໍ່ມະນຸດທຸກຄົນ ແລະ ທຸກຄົນທີ່ຕິດຕາມເຮົາຈົນເຖິງເວລາສຸດທ້າຍກໍຈະຖືກຊ່ວຍໃຫ້ລອດພົ້ນ ແລະ ຮັບເອົາການອວຍພອນຂອງເຮົາຢ່າງແນ່ນອນ. ມີຄວາມໝາຍເລິກລັບໃນພຣະທຳຂອງເຮົາທີ່ວ່າ "ທຸກຄົນທີ່ຕິດຕາມເຮົາເຖິງຈົນເວລາສຸດທ້າຍຈະຖືກຊ່ວຍໃຫ້ລອດພົ້ນຢ່າງແນ່ນອນ" ເຊິ່ງໝາຍຄວາມວ່າ: ຄົນທີ່ຕິດຕາມເຮົາຈົນເຖິງເວລາສຸດທ້າຍເປັນຄົນທີ່ຈະຖືກເຮົາຮັບເອົາຢ່າງສົມບູນ, ພວກເຂົາເປັນຄົນທີ່ສະແຫວງຫາຄວາມຈິງ ຫຼັງຈາກທີ່ຖືກເຮົາເອົາຊະນະ ແລະ ຖືກເຮັດໃຫ້ສົມບູນ. ເຈົ້າໄດ້ບັນລຸເງື່ອນໄຂໃດແດ່? ເຈົ້າພຽງແຕ່ບັນລຸໃນການຕິດຕາມເຮົາຈົນເຖິງເວລາສຸດທ້າຍ, ແຕ່ສິ່ງອື່ນໆເດ? ເຈົ້າໄດ້ປະຕິບັດຕາມພຣະທຳຂອງເຮົາບໍ? ເຈົ້າໄດ້ສຳເລັດການຮຽກຮ້ອງໜຶ່ງໃນຫ້າຢ່າງຂອງເຮົາ, ແຕ່ເຈົ້າບໍ່ມີເຈດຕະນາທີ່ຈະສຳເລັດອີກສີ່ຢ່າງທີ່ເຫຼືອ. ເຈົ້າພຽງແຕ່ຄົ້ນພົບເສັ້ນທາງທີ່ງ່າຍສຸດ ແລະ ສະບາຍສຸດ ແລະ ສະແຫວງຫາມັນ ດ້ວຍທັດສະນະຄະຕິພຽງແຕ່ຫວັງວ່າຈະໄດ້ໂຊກດີ. ສຳລັບຄົນແບບເຈົ້າ, ອຸປະນິໄສຂອງເຮົາແມ່ນການຕີສອນ ແລະ ການພິພາກສາ, ມັນແມ່ນຜົນກຳສະໜອງທີ່ຊອບທຳ ແລະ ມັນເປັນການລົງໂທດທີ່ຊອບທຳຕໍ່ຜູ້ກະທຳການຊົ່ວຊ້າທຸກຄົນ; ທຸກຄົນທີ່ບໍ່ເດີນຕາມຫົນທາງຂອງເຮົາຈະຖືກລົງໂທດຢ່າງແນ່ນອນ ເຖິງແມ່ນພວກເຂົາຕິດຕາມຈົນເຖິງເວລາສຸດທ້າຍ. ນີ້ແມ່ນຄວາມຊອບທຳຂອງພຣະເຈົ້າ. ເມື່ອອຸປະນິໄສທີ່ຊອບທຳນີ້ຖືກສຳແດງອອກໃນການລົງໂທດມະນຸດ, ມະນຸດກໍຈະຕົກສະເງີ້ ແລະ ຮູ້ສຶກເສຍດາຍວ່າ ໃນຂະນະທີ່ຕິດຕາມພຣະເຈົ້າ ເຂົາບໍ່ໄດ້ເດີນຕາມຫົນທາງຂອງພຣະອົງ. "ໃນເວລານັ້ນ, ຂ້ານ້ອຍພຽງແຕ່ທົນທຸກ ເລັກນ້ອຍໃນຂະນະທີ່ຕິດຕາມພຣະເຈົ້າ, ແຕ່ບໍ່ໄດ້ເດີນຕາມຫົນທາງຂອງພຣະເຈົ້າ. ມີຂໍ້ອ້າງຫຍັງແດ່? ບໍ່ມີທາງເລືອກນອກຈາກການຖືກຕີສອນ!" ແຕ່ໃນຈິດໃຈຂອງເຈົ້າ, ເຈົ້າກຳລັງຄິດວ່າ "ເຖິງຢ່າງໃດກໍຕາມ, ຂ້ານ້ອຍກໍໄດ້ຕິດຕາມຈົນເຖິງເວລາສຸດທ້າຍ ສະນັ້ນ ເຖິງແມ່ນພຣະອົງຈະຕີສອນຂ້ານ້ອຍ, ມັນກໍອາດຈະບໍ່

ແມ່ນການຕີສອນທີ່ຮຸນແຮງເກີນໄປ ແລະ ຫຼັງຈາກທີ່ວາງການຕີສອນນີ້ແລ້ວ ພຣະອົງກໍຍັງຕ້ອງການຂ້ານ້ອຍ. ຂ້ານ້ອຍຮູ້ວ່າ ພຣະອົງຊອບທຳ ແລະ ຈະບໍ່ປະຕິບັດກັບຂ້ານ້ອຍແບບນັ້ນຕະຫຼອດໄປ. ເພາະວ່າຂ້ານ້ອຍບໍ່ຄືກັບຄົນທີ່ຈະຖືກກວາດລ້າງ; ຄົນທີ່ຕ້ອງຖືກກວາດລ້າງຈະໄດ້ຮັບການຕີສອນຢ່າງໜັກ ໃນຂະນະທີ່ການຕີສອນຂອງຂ້ານ້ອຍຈະເບົາກວ່າ". ອຸປະນິໄສທີ່ຊອບທຳບໍ່ໄດ້ເປັນຄືກັບທີ່ເຈົ້າເວົ້າ. ມັນບໍ່ແມ່ນເຫດຜົນທີ່ວ່າ ຄົນທີ່ເກັ່ງໃນການສາລະພາບຄວາມຜິດບາບຂອງພວກເຂົາຈະຖືກຈັດການຢ່າງຜ່ອນຜັນ. ຄວາມຊອບທຳແມ່ນຄວາມບໍລິສຸດ ແລະ ເປັນອຸປະນິໄສທີ່ບໍ່ທົນຕໍ່ການເຮັດຜິດໂດຍມະນຸດ ແລະ ທຸກສິ່ງທີ່ສົກກະປົກ ແລະ ບໍ່ໄດ້ປ່ຽນແປງເປົ້າໝາຍຂອງຄວາມລັງກຽດຂອງພຣະເຈົ້າ. ອຸປະນິໄສທີ່ຊອບທຳຂອງພຣະເຈົ້າບໍ່ແມ່ນກົດໝາຍ ແຕ່ເປັນບົດບັນຍັດຄຸ້ມຄອງ: ມັນເປັນບົດບັນຍັດຄຸ້ມຄອງພາຍໃນອານາຈັກ ແລະ ບົດບັນຍັດຄຸ້ມຄອງນີ້ແມ່ນການລົງໂທດທີ່ຊອບທຳຕໍ່ໃຜກໍຕາມທີ່ບໍ່ມີຄວາມຈິງ ແລະ ບໍ່ປ່ຽນແປງ ແລະ ບໍ່ມີຄວາມລອດພົ້ນແມ່ນແຕ່ໜ້ອຍດຽວ. ຍ້ອນເມື່ອແຕ່ລະຄົນຖືກຈັດແບ່ງຕາມປະເພດ, ຄົນດີກໍຈະໄດ້ຮັບລາງວັນ ແລະ ຄົນຊົ່ວກໍຈະຖືກລົງໂທດ. ມັນເປັນເວລາທີ່ຈຸດໝາຍປາຍທາງຂອງມະນຸດຈະຖືກເຮັດໃຫ້ຊັດເຈນ, ມັນເປັນເວລາທີ່ພາລະກິດຂອງຄວາມລອດພົ້ນຈະມາເຖິງຈຸດສິ້ນສຸດ ຫຼັງຈາກນັ້ນ ພາລະກິດແຫ່ງການຊ່ວຍມະນຸດໃຫ້ລອດພົ້ນຈະບໍ່ຖືກປະຕິບັດອີກຕໍ່ໄປ ແລະ ຜົນກຳສະໜອງຈະນຳມາເຖິງທຸກໆຄົນທີ່ເຮັດການຊົ່ວຮ້າຍ. ບາງຄົນເວົ້າວ່າ "ພຣະເຈົ້າຈື່ທຸກໆຄົນທີ່ຢູ່ຂ້າງພຣະອົງຕະຫຼອດ. ພຣະອົງຈະບໍ່ລືມພວກເຮົາຄົນໃດຄົນໜຶ່ງ. ພວກເຮົາຮັບປະກັນວ່າຈະຖືກພຣະເຈົ້າເຮັດໃຫ້ສົມບູນ. ພຣະອົງຈະບໍ່ຈື່ຄົນໃດກໍຕາມທີ່ຢູ່ເບື້ອງລຸ່ມ, ຮັບປະກັນໄດ້ວ່າ ພວກເຂົາທີ່ຢູ່ທ່າມກາງຄົນທີ່ຈະຢູ່ເບື້ອງລຸ່ມຈະຖືກເຮັດໃຫ້ສົມບູນໜ້ອຍກວ່າພວກເຮົາ ຜູ້ເຊິ່ງພົບພໍ້ພຣະເຈົ້າຢູ່ເລື້ອຍໆ; ທ່າມກາງພວກເຮົານັ້ນ ບໍ່ມີໃຜທີ່ຖືກລືມໂດຍພຣະເຈົ້າ, ພວກເຮົາທຸກຄົນໄດ້ຮັບການເຫັນດີຈາກພຣະເຈົ້າ ແລະ ພວກເຂົາຮັບປະກັນໄດ້ວ່າຈະຖືກພຣະເຈົ້າເຮັດໃຫ້ສົມບູນ". ພວກເຈົ້າທຸກຄົນມີແນວຄິດແບບດັ່ງກ່າວ. ແລ້ວນີ້ແມ່ນຄວາມຊອບທຳບໍ? ເຈົ້າໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ ຫຼື ບໍ່? ຕາມຄວາມຈິງແລ້ວ ເຈົ້າເຜີຍແຜ່ຂ່າວລືແບບນີ້, ເຈົ້າຊ່າງບໍ່ມີຄວາມລະອາຍແກ່ໃຈເລີຍ!

ໃນປັດຈຸບັນ, ບາງຄົນສະແຫວງຫາເພື່ອຖືກພຣະເຈົ້າໃຊ້ ແຕ່ຫຼັງຈາກທີ່ຖືກເອົາຊະນະ ພວກເຂົາກໍບໍ່ສາມາດຖືກໃຊ້ໂດຍກົງ. ສຳລັບພຣະທຳທີ່ກ່າວໄວ້ໃນປັດຈຸບັນ ເມື່ອພຣະເຈົ້າໃຊ້ຜູ້ຄົນ, ຖ້າເຈົ້າຍັງບໍ່ສາມາດສຳເລັດພຣະທຳເຫຼົ່ານັ້ນໄດ້, ແລ້ວເຈົ້າກໍຍັງບໍ່ໄດ້ຖືກເຮັດໃຫ້ສົມບູນ. ເວົ້າອີກແບບໜຶ່ງກໍຄືການມາເຖິງຂອງເວລາສຸດທ້າຍຂອງຊ່ວງໄລຍະທີ່ມະນຸດຖືກເຮັດໃຫ້ສົມບູນຈະກຳນົດວ່າ ມະນຸດຈະຖືກພຣະເຈົ້າກຳຈັດ ຫຼື ຖືກໃຊ້. ຄົນທີ່ຖືກເອົາຊະນະແມ່ນຕົວຢ່າງແຫ່ງຄວາມຂີ້ຄ້ານ ແລະ ຄວາມຄິດລົບ; ພວກເຂົາເປັນແບບຢ່າງ ແລະ ຕົວຢ່າງ, ແຕ່ພວກເຂົາບໍ່ໄດ້ເປັນຫຼາຍໄປກວ່າຄວາມແຕກຕ່າງ. ມີແຕ່ຫຼັງຈາກທີ່ຊີວິດຈິດໃຈຂອງມະນຸດໄດ້ຮັບການປ່ຽນແປງ ແລະ ເຂົາໄດ້ບັນລຸການປ່ຽນແປງພາຍໃນ ແລະ ພາຍນອກ ເຂົາຈຶ່ງຈະຖືກເຮັດໃຫ້ສົມບູນຢ່າງຄົບຖ້ວນ. ໃນປັດຈຸບັນ, ເຈົ້າຕ້ອງການສິ່ງໃດ: ການຖືກເອົາຊະນະ ຫຼື ການຖືກເຮັດໃຫ້ສົມບູນ? ເຈົ້າປາຖະໜາທີ່ຈະບັນລຸສິ່ງໃດ? ເຈົ້າບັນລຸເງື່ອນໄຂໃນການຖືກເຮັດໃຫ້ສົມບູນແລ້ວບໍ? ອັນໃດຄືເງື່ອນໄຂທີ່ເຈົ້າຍັງຂາດ? ເຈົ້າຄວນຈັດກຽມ

ຕົນເອງແນວໃດ ແລະ ເຈົ້າຄວນທົດແທນຄວາມຂາດເຂີນຂອງເຈົ້າແນວໃດ? ເຈົ້າຄວນເຂົ້າສູ່ເສັ້ນທາງໃນການຖືກເຮັດໃຫ້ສົມບູນແນວໃດ? ເຈົ້າຄວນຍອມຮັບຢ່າງສົມບູນແນວໃດ? ເຈົ້າຮຽກຮ້ອງທີ່ຈະຖືກເຮັດໃຫ້ສົມບູນ, ສະນັ້ນ ເຈົ້າສະແຫວງຫາຄວາມບໍລິສຸດບໍ? ເຈົ້າເປັນຄົນທີ່ສະແຫວງຫາເພື່ອຜະເຊີນກັບການຕີສອນ ແລະ ການພິພາກສາ ເພື່ອເຈົ້າອາດຈະຖືກພຣະເຈົ້າຊໍາລະໃຫ້ບໍລິສຸດບໍ? ເຈົ້າສະແຫວງຫາທີ່ຈະຖືກຊໍາລະລ້າງ, ສະນັ້ນ ເຈົ້າເຕັມໃຈທີ່ຈະຍອມຮັບການຕີສອນ ແລະ ການພິພາກສາບໍ? ເຈົ້າຮຽກຮ້ອງທີ່ຈະຮູ້ຈັກພຣະເຈົ້າ, ແຕ່ເຈົ້າມີຄວາມຮູ້ກ່ຽວກັບການຕີສອນ ແລະ ການພິພາກສາຂອງພຣະອົງບໍ? ໃນປັດຈຸບັນ, ພາລະກິດສ່ວນໃຫຍ່ທີ່ພຣະອົງປະຕິບັດໃນເຈົ້າແມ່ນການຕີສອນ ແລະ ການພິພາກສາ; ແມ່ນຫຍັງຄືຄວາມເຂົ້າໃຈຂອງເຈົ້າກ່ຽວກັບພາລະກິດນີ້ ທີ່ຖືກປະຕິບັດໃນຕົວເຈົ້າ? ການຕີສອນ ແລະ ການພິພາກສາທີ່ເຈົ້າປະສົບແມ່ນໄດ້ຊໍາລະລ້າງເຈົ້າແລ້ວບໍ? ມັນໄດ້ປ່ຽນແປງເຈົ້າແລ້ວບໍ? ມັນມີຜົນສະທ້ອນຫຍັງແດ່ໃນຕົວເຈົ້າ? ເຈົ້າເມື່ອຍກັບພາລະກິດຫຼາຍຢ່າງໃນປັດຈຸບັນນີ້ແລ້ວບໍ ເຊັ່ນ: ການສາບແຊ່ງ, ການພິພາກສາ ແລະ ການເປີດເຜີຍ ຫຼື ເຈົ້າຮູ້ສຶກວ່າ ສິ່ງເຫຼົ່ານີ້ເປັນປະໂຫຍດກັບເຈົ້າຫຼາຍບໍ? ເຈົ້າຮັກພຣະເຈົ້າ, ແຕ່ເປັນຫຍັງເຈົ້າຈຶ່ງຮັກພຣະອົງ? ເຈົ້າຮັກພຣະເຈົ້າ ເພາະເຈົ້າໄດ້ຮັບພຣະຄຸນເລັກນ້ອຍບໍ? ຫຼື ເຈົ້າຮັກພຣະເຈົ້າຫຼັງຈາກທີ່ໄດ້ຮັບສັນຕິສຸກ ແລະ ຄວາມສຸກ? ຫຼື ເຈົ້າຮັກພຣະເຈົ້າຫຼັງຈາກທີ່ຖືກຊໍາລະລ້າງໂດຍການຕີສອນ ແລະ ການພິພາກສາຂອງພຣະອົງ? ແມ່ນຫຍັງກັນແທ້ທີ່ເຮັດໃຫ້ເຈົ້າຮັກພຣະເຈົ້າ? ເປໂຕໄດ້ບັນລຸເງື່ອນໄຂໃດແດ່ເພື່ອທີ່ຈະຖືກເຮັດໃຫ້ສົມບູນ? ຫຼັງຈາກທີ່ເພິ່ນຖືກເຮັດໃຫ້ສົມບູນ, ແມ່ນຫຍັງຄືຫົນທາງທີ່ສໍາຄັນທີ່ຖືກສໍາແດງອອກ? ເພິ່ນຮັກພຣະເຢຊູເຈົ້າ ເພາະເພິ່ນປາຖະໜາພຣະອົງບໍ ຫຼື ຍ້ອນເພິ່ນບໍ່ສາມາດເຫັນພຣະອົງໄດ້ ຫຼື ຍ້ອນເພິ່ນຖືກຕໍານິຕິເຕືອນ? ຫຼື ເພິ່ນຮັກພຣະເຢຊູເຈົ້າຫຼາຍຂຶ້ນ ເພາະເພິ່ນໄດ້ຮັບການທົນທຸກແຫ່ງຄວາມລໍາບາກຍາກແຄ້ນ ແລະ ໄດ້ມາຮູ້ຈັກຄວາມສົກກະປົກ ແລະ ການບໍ່ເຊື່ອຟັງຂອງເພິ່ນເອງ, ໄດ້ຮຽນຮູ້ຈັກຄວາມບໍລິສຸດຂອງພຣະຜູ້ເປັນເຈົ້າບໍ? ຄວາມຮັກຂອງເພິ່ນຕໍ່ພຣະເຈົ້າຍິ່ງບໍລິສຸດຂຶ້ນ ຍ້ອນການຕີສອນ ແລະ ການພິພາກສາຂອງພຣະເຈົ້າ ຫຼື ຍ້ອນສິ່ງອື່ນ? ມັນແມ່ນສິ່ງໃດ? ເຈົ້າຮັກພຣະເຈົ້າ ຍ້ອນພຣະຄຸນຂອງພຣະເຈົ້າ ແລະ ຍ້ອນໃນປັດຈຸບັນ ພຣະອົງໄດ້ມອບການອວຍພອນໜ້ອຍໜຶ່ງໃຫ້ກັບເຈົ້າ. ນີ້ແມ່ນຄວາມຮັກທີ່ແທ້ຈິງບໍ? ເຈົ້າຄວນຮັກພຣະເຈົ້າແນວໃດ? ເຈົ້າຈະສາມາດຮັກພຣະອົງຢ່າງແທ້ຈິງບໍຫຼັງຈາກທີ່ຍອມຮັບການຕີສອນ ແລະ ການພິພາກສາຂອງພຣະອົງ ແລະ ໄດ້ເຫັນເຖິງອຸປະນິໄສທີ່ຊອບທໍາຂອງພຣະອົງ ຈົນວ່າເຈົ້າໝັ້ນໃຈຢ່າງແທ້ຈິງ ແລະ ມີຄວາມຮູ້ກ່ຽວກັບພຣະອົງ? ຄືກັບເປໂຕ, ເຈົ້າສາມາດເວົ້າໄດ້ບໍວ່າ ເຈົ້າບໍ່ສາມາດຮັກພຣະເຈົ້າຢ່າງພຽງພໍ? ສິ່ງທີ່ເຈົ້າສະແຫວງຫາຈະຖືກເອົາຊະນະຫຼັງຈາກການຕີສອນ ແລະ ການພິພາກສາບໍ ຫຼື ຖືກຊໍາລະລ້າງ, ຖືກປົກປ້ອງ ແລະ ຖືກດູແລຫຼັງຈາກການຕີສອນ ແລະ ການພິພາກສາ? ໃນສິ່ງເຫຼົ່ານີ້ ເຈົ້າສະແຫວງຫາສິ່ງໃດ? ຊີວິດຂອງເຈົ້າເປັນຊີວິດທີ່ມີຄວາມໝາຍບໍ ຫຼື ມັນບໍ່ມີຈຸດໝາຍ ແລະ ປາສະຈາກຄຸນຄ່າ? ເຈົ້າຕ້ອງການເນື້ອໜັງບໍ ຫຼື ເຈົ້າຕ້ອງການຄວາມຈິງ? ເຈົ້າປາຖະໜາການພິພາກສາບໍ ຫຼື ຄວາມສະບາຍ? ເມື່ອໄດ້ມີປະສົບການຫຼາຍຢ່າງກັບພາລະກິດຂອງພຣະເຈົ້າ ແລະ ເມື່ອໄດ້ເຫັນເຖິງຄວາມບໍລິສຸດ ແລະ ຄວາມຊອບທໍາຂອງ

ພຣະເຈົ້າ, ເຈົ້າຄວນສະແຫວງຫາແນວໃດ? ເຈົ້າຄວນເດີນຕາມເສັ້ນທາງນີ້ແນວໃດ? ເຈົ້າຄວນນຳຄວາມຮັກຂອງເຈົ້າຕໍ່ພຣະເຈົ້າເຂົ້າສູ່ການປະຕິບັດແນວໃດ? ການຕີສອນ ແລະ ການພິພາກສາຂອງພຣະອົງໄດ້ບັນລຸຜົນຫຍັງບໍໃນຕົວເຈົ້າ? ບໍ່ວ່າເຈົ້າຈະມີຄວາມຮູ້ກ່ຽວກັບການຕີສອນ ແລະ ການພິພາກສາຂອງພຣະເຈົ້າ ແມ່ນຂຶ້ນກັບວ່າ ເຈົ້າດຳລົງຊີວິດໃນສິ່ງໃດ ແລະ ເຈົ້າຮັກພຣະເຈົ້າຂະໜາດໃດ! ປາກເຈົ້າບອກວ່າ ເຈົ້າຮັກພຣະເຈົ້າ, ແຕ່ສິ່ງທີ່ເຈົ້າດຳລົງຊີວິດຕາມ ແມ່ນອຸປະນິໄສເດີມ ແລະເສື່ອມຊາມ; ເຈົ້າບໍ່ມີຄວາມຢຳເກງພຣະເຈົ້າ ແລະ ແຮງໄກທີ່ເຈົ້າຈະມີຄວາມສຳນຶກ. ຄົນປະເພດນີ້ຮັກພຣະເຈົ້າບໍ? ຄົນປະເພດນີ້ຊື່ສັດກັບພຣະເຈົ້າບໍ? ພວກເຂົາເປັນຄົນທີ່ຍອມຮັບການຕີສອນ ແລະການພິພາກສາຂອງພຣະເຈົ້າບໍ? ເຈົ້າເວົ້າວ່າ ເຈົ້າຮັກພຣະເຈົ້າ ແລະ ເຊື່ອໃນພຣະອົງ, ແຕ່ເຈົ້າບໍ່ໄດ້ປະຖິ້ມແນວຄິດຂອງເຈົ້າ. ໃນວຽກງານຂອງເຈົ້າ, ທາງເຂົ້າເຖິງຂອງເຈົ້າ, ຄຳເວົ້າທີ່ເຈົ້າເວົ້າອອກມາ ແລະ ໃນຊີວິດຂອງເຈົ້າ, ບໍ່ມີການສຳແດງເຖິງຄວາມຮັກຂອງເຈົ້າຕໍ່ພຣະເຈົ້າເລີຍ ແລະ ບໍ່ມີການເຄົາລົບນັບຖືພຣະເຈົ້າ. ນີ້ແມ່ນຄົນທີ່ໄດ້ຮັບການຕີສອນ ແລະ ການພິພາກສາບໍ? ຄົນປະເພດນີ້ຈະສາມາດເປັນເປໂຕໄດ້ບໍ? ຄົນທີ່ເປັນຄືກັບເປໂຕມີພຽງແຕ່ຄວາມຮູ້ ແຕ່ບໍ່ດຳລົງຊີວິດຕາມບໍ? ໃນປັດຈຸບັນ, ແມ່ນຫຍັງຄືເງື່ອນໄຂທີ່ຮຽກຮ້ອງໃຫ້ມະນຸດດຳລົງຊີວິດທີ່ແທ້ຈິງ? ຄຳອະທິຖານຂອງເປໂຕເປັນພຽງຄຳເວົ້າທີ່ອອກມາຈາກປາກຂອງເພິ່ນບໍ? ຄຳເວົ້າເຫຼົ່ານັ້ນບໍ່ໄດ້ອອກມາຈາກສ່ວນເລິກໃນຫົວໃຈຂອງເພິ່ນບໍ? ເປໂຕມີແຕ່ອະທິຖານ ແລະ ບໍ່ໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດບໍ? ການສະແຫວງຫາຂອງເຈົ້າແມ່ນເພື່ອແກ່ຜູ້ໃດ? ເຈົ້າຄວນເຮັດໃຫ້ຕົນເອງໄດ້ຮັບການປົກປ້ອງ ແລະ ການຊຳລະລ້າງໃນລະຫວ່າງການຕີສອນ ແລະ ການພິພາກສາຂອງພຣະເຈົ້າແນວໃດ? ການຕີສອນ ແລະການພິພາກສາຂອງພຣະເຈົ້າບໍ່ເປັນປະໂຫຍດຕໍ່ມະນຸດບໍ? ການພິພາກສາທຸກຢ່າງບໍ່ແມ່ນການລົງໂທດບໍ? ເປັນໄປໄດ້ບໍວ່າ ມີແຕ່ສັນຕິສຸກ ແລະ ຄວາມສຸກເທົ່ານັ້ນ, ມີແຕ່ການອວຍພອນທາງວັດຖຸ ແລະຄວາມສະບາຍໃຈຊົ່ວໄລຍະໜຶ່ງເທົ່ານັ້ນທີ່ເປັນປະໂຫຍດສຳລັບຊີວິດຂອງມະນຸດ? ຖ້າມະນຸດດຳລົງຊີວິດໃນສະພາບແວດລ້ອມທີ່ສະບາຍ ແລະ ສະດວກ ໂດຍປາສະຈາກຊີວິດແຫ່ງການພິພາກສາ, ພວກເຂົາຈະສາມາດຖືກຊຳລະລ້າງໄດ້ບໍ? ຖ້າມະນຸດປາຖະໜາທີ່ຈະປ່ຽນແປງ ແລະ ໄດ້ຮັບການຊຳລະລ້າງ, ພວກເຂົາຄວນຍອມຮັບການຖືກເຮັດໃຫ້ສົມບູນແນວໃດ? ເຈົ້າຄວນເລືອກເສັ້ນທາງໃດໃນປັດຈຸບັນ?

# ພວກເຈົ້າຕ້ອງເຂົ້າໃຈພາລະກິດ ຢ່າປະຕິບັດຕາມຢ່າງສັບສົນ!

ໃນປັດຈຸບັນນີ້ ມີຫຼາຍຄົນທີ່ເຊື່ອໃນລັກສະນະທີ່ສັບສົນ. ພວກເຈົ້າມີຄວາມຢາກຮູ້ຢາກເຫັນຫຼາຍເກີນໄປ, ມີຄວາມປາຖະໜາຢາກໄດ້ພອນຫຼາຍເກີນໄປ ແລະ ມີຄວາມປາຖະໜາທີ່ຈະສະແຫວງຫາຊີວິດໜ້ອຍເກີນໄປ. ຜູ້ທີ່ເຊື່ອໃນພຣະເຢຊູທຸກມື້ນີ້ແມ່ນເຕັມໄປດ້ວຍຄວາມກະຕືລືລົ້ນ. ພຣະເຢຊູຈະນໍາພາພວກເຂົາກັບໄປສູ່ເຮືອນແຫ່ງສະຫວັນ ແລ້ວພວກເຂົາຈະບໍ່ເຊື່ອໄດ້ແນວໃດ? ບາງຄົນເປັນຜູ້ທີ່ເຊື່ອຕະຫຼອດຊີວິດຂອງພວກເຂົາ, ພວກເຂົາເຊື່ອມາເປັນເວລາ 40 ຫຼື 50 ປີແລ້ວ ແລະ ພວກເຂົາບໍ່ເຄີຍເບື່ອທີ່ຈະອ່ານພຣະຄໍາພີເລີຍ. ນີ້ກໍຍ້ອນພວກເຂົາຄິດ[ກ] ວ່າ ບໍ່ວ່າຈະເກີດຫຍັງຂຶ້ນ, ຕາບໃດທີ່ພວກເຂົາເຊື່ອ, ພວກເຂົາກໍຈະໄດ້ຂຶ້ນສະຫວັນ. ພວກເຈົ້າໄດ້ຕິດຕາມພຣະເຈົ້າດ້ວຍເສັ້ນທາງນີ້ພຽງແຕ່ສອງສາມປີເທົ່ານັ້ນ, ແຕ່ວ່າພວກເຈົ້າກໍາລັງເລໃຈ ແລະ ສູນເສຍຄວາມອົດທົນ. ນີ້ກໍຍ້ອນວ່າຄວາມປາຖະໜາທີ່ຈະໄດ້ຮັບພອນນັ້ນແຮງກ້າເກີນໄປ. ການຍ່າງບົນເສັ້ນທາງທີ່ແທ້ຈິງຂອງພວກເຈົ້ານັ້ນຖືກຄອບງໍາໂດຍຄວາມປາຖະໜາທີ່ຈະໄດ້ຮັບພອນຂອງພວກເຈົ້າ ແລະ ດ້ວຍຄວາມຢາກຮູ້ຢາກເຫັນຂອງພວກເຈົ້າ. ພວກເຈົ້າບໍ່ມີຄວາມເຂົ້າໃຈຫຍັງເລີຍກ່ຽວກັບຂັ້ນຕອນນີ້ຂອງພາລະກິດ. ສິ່ງທີ່ເຮົາກ່າວໃນມື້ນີ້ສ່ວນຫຼາຍບໍ່ແມ່ນກ່ຽວກັບບັນດາຜູ້ທີ່ເຊື່ອໃນພຣະເຢຊູ; ບໍ່ໄດ້ກ່າວເພື່ອຕໍ່ຕ້ານຄວາມຄິດຂອງພວກເຂົາແມ່ນແຕ່ໜ້ອຍດຽວ. ຄວາມຈິງແລ້ວ, ຄວາມຄິດເຫຼົ່ານີ້ທີ່ຖືກເປີດເຜີຍເປັນຄວາມຄິດທີ່ມີຢູ່ໃນພວກເຈົ້າແລ້ວ, ຍ້ອນພວກເຈົ້າບໍ່ເຂົ້າໃຈວ່າເປັນຫຍັງພຣະຄໍາພີຈິ່ງຖືກວາງໄວ້ທາງຂ້າງ, ເປັນຫຍັງເຮົາຈິ່ງເວົ້າວ່າພາລະກິດຂອງພຣະເຢໂຮວານັ້ນຫຼ້າສະໄໝ ແລະ ເປັນຫຍັງເຮົາຈິ່ງເວົ້າວ່າພາລະກິດຂອງພຣະເຢຊູນັ້ນຫຼ້າສະໄໝ. ຄວາມຈິງກໍຄື ພວກເຈົ້າມີຫຼາຍແນວຄວາມຄິດທີ່ພວກເຈົ້າບໍ່ໄດ້ເວົ້າອອກມາ. ພວກເຈົ້າມີຫຼາຍຄໍາຄິດເຫັນທີ່ຝັງເລິກຢູ່ໃນຫົວໃຈຂອງພວກເຈົ້າ ແລະ ພວກເຈົ້າພຽງແຕ່ຕິດຕາມຝູງຊົນຊື່ໆ. ພວກເຈົ້າຄິດແທ້ບໍວ່າ ພວກເຈົ້າບໍ່ໄດ້ມີແນວຄວາມຄິດຢ່າງຫຼວງຫຼາຍ? ພຽງແຕ່ພວກເຈົ້າບໍ່ໄດ້ເວົ້າເຖິງພວກມັນເທົ່ານັ້ນເອງ! ໃນແທ້ຈິງແລ້ວ, ພວກເຈົ້າຕິດຕາມພຣະເຈົ້າພໍເປັນພິທີເທົ່ານັ້ນ, ພວກເຈົ້າບໍ່ໄດ້ສະແຫວງຫາເສັ້ນທາງທີ່ແທ້ຈິງແມ່ນແຕ່ໜ້ອຍດຽວ ແລະ ບໍ່ໄດ້ຕັ້ງໃຈມາເພື່ອຮັບຊີວິດ. ພວກເຈົ້າມີທັດສະນະຄະຕິພຽງຢາກເຫັນວ່າຈະເກີດຫຍັງຂຶ້ນ. ຍ້ອນວ່າພວກເຈົ້າບໍ່ໄດ້ປ່ອຍວາງຄວາມຄິດເກົ່າໆຂອງພວກເຈົ້າ, ບໍ່ມີໃຜໃນບັນດາພວກເຈົ້າທີ່ສາມາດຖວາຍຕົນເອງໄດ້ຢ່າງເຕັມທີ່. ມາຮອດຈຸດນີ້ແລ້ວ ພວກເຈົ້າກໍຍັງສືບຕໍ່ກັງວົນກ່ຽວກັບຊະຕາກໍາຂອງພວກເຈົ້າຢູ່ ໂດຍປ່ອຍໃຫ້ຄວາມຄິດຂອງພວກເຈົ້າປັ່ນປ່ວນຢູ່ຕະຫຼອດມື້ຕະຫຼອດຄືນ ແລະ ບໍ່ສາມາດປ່ອຍວາງມັນໄດ້ຈັກເທື່ອ. ເຈົ້າຄິດວ່າເມື່ອເຮົາກ່າວເຖິງພວກຟາຣີຊາຍ ເຮົາໝາຍເຖິງ "ພວກອາວຸໂສ" ໃນສາສະໜາບໍ? ບໍ່ແມ່ນເຈົ້າເປັນຕົວແທນຂອງພວກຟາຣີຊາຍທີ່ກ້າວໜ້າທີ່ສຸດຂອງຍຸກປັດຈຸບັນບໍ? ເຈົ້າຄິດວ່າເມື່ອເຮົາ

---

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ "ພວກເຂົາຄິດ".

ກ່າວເຖິງຄົນເຫຼົ່ານັ້ນທີ່ປຽບທຽບເຮົາໃສ່ກັບພຣະຄຳພີ ເຮົາໝາຍເຖິງບັນດາຜູ້ຊ່ຽວຊານດ້ານພຣະຄຳພີໃນອົງກອນສາສະໜາເທົ່ານັ້ນບໍ? ເຈົ້າຄິດວ່າເມື່ອເຮົາກ່າວເຖິງຜູ້ຄົນທີ່ຕອກຕະປູຄຶງພຣະເຈົ້າໃສ່ໄມ້ກາງແຂນອີກຄັ້ງ ແມ່ນເຮົາກຳລັງກ່າວເຖິງບັນດາຄະນະຜູ້ນຳທາງສາສະໜາບໍ? ບໍ່ແມ່ນພວກເຈົ້າເປັນນັກສະແດງທີ່ດີເດັ່ນທີ່ກຳລັງຫຼິ້ນບົດບາດນີ້ຢູ່ບໍ? ເຈົ້າຄິດວ່າພຣະທຳທັງໝົດທີ່ເຮົາກ່າວເພື່ອຕໍ່ຕ້ານກັບຄວາມຄິດຂອງຄົນ ຄືການເຍາະເຍີ້ຍພວກປະກາດພຣະທຳ ແລະ ພວກເຖົ້າແກ່ຂອງສາສະໜາເທົ່ານັ້ນບໍ? ບໍ່ແມ່ນພວກເຈົ້າກໍມີສ່ວນຮ່ວມໃນສິ່ງເຫຼົ່ານີ້ທັງໝົດບໍ? ພວກເຈົ້າຄິດວ່າພວກເຈົ້າມີພຽງສອງສາມຄວາມຄິດເທົ່ານັ້ນບໍ? ພຽງແຕ່ວ່າ ຕອນນີ້ ພວກເຈົ້າທຸກຄົນໄດ້ຮຽນເປັນຄົນສະຫຼາດຂຶ້ນເທົ່ານັ້ນເອງ. ເຖິງພວກເຈົ້າບໍ່ເວົ້າໃນສິ່ງທີ່ພວກເຈົ້າບໍ່ເຂົ້າໃຈ ຫຼື ເປີດໂປງຄວາມຮູ້ສຶກທີ່ພວກເຈົ້າມີກ່ຽວກັບສິ່ງເຫຼົ່ານັ້ນ ແຕ່ວ່າພວກເຈົ້າກໍຍັງຂາດຫົວໃຈແຫ່ງຄວາມເຄົາລົບນັບຖື ແລະ ຫົວໃຈແຫ່ງການຍອມຮັບຢູ່ດີ. ດັ່ງທີ່ພວກເຈົ້າໄດ້ເຫັນ, ການສຶກສາ, ການສັງເກດ ແລະ ການຄອງຖ້າ ແມ່ນວິທີການປະຕິບັດທີ່ດີທີ່ສຸດຂອງພວກເຈົ້າໃນປັດຈຸບັນນີ້. ພວກເຈົ້າໄດ້ຮຽນຮູ້ທີ່ຈະເປັນຄົນສະຫຼາດເກີນໄປ. ແນວໃດກໍຕາມ, ພວກເຈົ້າຮູ້ບໍວ່າ ນີ້ແມ່ນຮູບແບບຈິດຕະວິທະຍາທີ່ມີໄຫວພິບທີ່ສຸດຂອງພວກເຈົ້າ? ພວກເຈົ້າຄິດວ່າ ພວກເຈົ້າສະຫຼາດພຽງໄລຍະເວລາໃດໜຶ່ງຈະຊ່ວຍໃຫ້ພວກເຈົ້າຫຼົບໜີຈາກການຂ້ຽນຕີນິລັນດອນໄດ້ບໍ? ພວກເຈົ້າໄດ້ຮຽນຮູ້ທີ່ຈະເປັນຄົນ "ສະຫຼາດ" ຫຼາຍເກີນໄປ! ບາງຄົນຖາມເຮົາກ່ຽວກັບສິ່ງຕ່າງໆເຊັ່ນ: "ມື້ໜຶ່ງ, ເມື່ອມີບຸກຄົນທາງສາສະໜາຖາມຂ້ານ້ອຍວ່າ, ເປັນຫຍັງພຣະເຈົ້າຂອງພວກເຈົ້າຈຶ່ງບໍ່ສ້າງສິ່ງອັດສະຈັນແມ່ນແຕ່ສິ່ງດຽວ? ຂ້ານ້ອຍຄວນອະທິບາຍແນວໃດ?" ປັດຈຸບັນນີ້, ມັນບໍ່ແມ່ນມີແຕ່ຄົນຂອງສາສະໜາທີ່ຈະຖາມກ່ຽວກັບສິ່ງດັ່ງກ່າວ. ກົງກັນຂ້າມ, ຍ້ອນວ່າເຈົ້າບໍ່ເຂົ້າໃຈພາລະກິດຂອງມື້ນີ້ ແລະ ຈົມປັກຢູ່ກັບແນວຄວາມຄິດຫຼາຍເກີນໄປ. ເຈົ້າຍັງບໍ່ຮູ້ບໍວ່າເຮົາໝາຍເຖິງໃຜເມື່ອເວລາເຮົາກ່າວເຖິງພວກນັກບວດ? ເຈົ້າບໍ່ຮູ້ບໍວ່າເຮົາກຳລັງອະທິບາຍພຣະຄຳພີໃຫ້ໃຜຟັງ? ເຈົ້າບໍ່ຮູ້ບໍວ່າເຮົາກ່າວກັບໃຜເມື່ອເວລາເຮົາອະທິບາຍເຖິງສາມຂັ້ນຕອນຂອງພາລະກິດ? ຖ້າເຮົາບໍ່ໄດ້ກ່າວເຖິງສິ່ງເຫຼົ່ານີ້, ພວກເຈົ້າຈະໝັ້ນໃຈໄດ້ຢ່າງງ່າຍດາຍບໍ? ພວກເຈົ້າຈະຍອມຮັບເອົາແບບງ່າຍໆບໍ? ພວກເຈົ້າຈະປ່ອຍວາງຄວາມຄິດເກົ່າໆເຫຼົ່ານັ້ນໄດ້ຢ່າງງ່າຍດາຍແທ້ບໍ? ໂດຍສະເພາະບັນດາ "ຜູ້ຊາຍແທ້" ຜູ້ທີ່ບໍ່ເຄີຍເຊື່ອຟັງຜູ້ໃດ, ພວກເຂົາຈະເຊື່ອຟັງຢ່າງງ່າຍດາຍບໍ? ເຮົາຮູ້ດີວ່າ ເຖິງແມ່ນຄວາມເປັນມະນຸດຂອງພວກເຈົ້າຢູ່ໃນລະດັບຕໍ່າ ແລະ ພວກເຈົ້າມີຄວາມສາມາດຕໍ່າຫຼາຍ, ມີສະໝອງທີ່ມີການພັດທະນາໜ້ອຍ ແລະ ບໍ່ມີປະຫວັດອັນຍາວນານກ່ຽວກັບການເຊື່ອໃນພຣະເຈົ້າ, ແຕ່ແທ້ຈິງແລ້ວ ພວກເຈົ້າມີຄວາມຄິດຂ້ອນຂ້າງຫຼາຍ ແລະ ທຳມະຊາດຂອງພວກເຈົ້າແມ່ນບໍ່ຍອມອ່ອນນ້ອມຕໍ່ຜູ້ໃດງ່າຍໆ. ແນວໃດກໍຕາມ, ປັດຈຸບັນນີ້ ພວກເຈົ້າສາມາດອ່ອນນ້ອມໄດ້ກໍຍ້ອນວ່າພວກເຈົ້າຖືກບັງຄັບ ແລະ ເຮັດຫຍັງບໍ່ໄດ້; ພວກເຈົ້າຄືເສືອໃນກົງເຫຼັກ, ບໍ່ສາມາດແລ່ນຫຼິ້ນໄດ້ຢ່າງອິດສະຫຼະຕາມທັກສະທີ່ພວກເຈົ້າມີ. ເຖິງແມ່ນວ່າພວກເຈົ້າຈະມີປີກກໍຕາມ ພວກເຈົ້າຈະເຫັນໄດ້ວ່າ ມັນຍາກທີ່ຈະບິນໄດ້. ເຖິງແມ່ນວ່າບໍ່ໄດ້ຮັບພອນ ພວກເຈົ້າກໍຍັງເຕັມໃຈທີ່ຈະປະຕິບັດຕາມ. ແນວໃດກໍຕາມ, ນີ້ບໍ່ແມ່ນວິນຍານ "ຄົນດີ" ຂອງພວກເຈົ້າ, ແຕ່ກົງກັນຂ້າມ ຍ້ອນວ່າ ພວກເຈົ້າໄດ້ລົ້ມເຫຼວໃນທຸກດ້ານ ແລະ ພວກເຈົ້າເອງກໍ

ເສຍໃຈຫຼາຍ. ຍ້ອນວ່າທຸກສິ່ງໃນພາລະກິດນີ້ເຮັດໃຫ້ພວກເຈົ້າລົ້ມລົງ. ຖ້າມີສິ່ງໃດທີ່ພວກເຈົ້າສາມາດເຮັດສຳເລັດໄດ້, ພວກເຈົ້າຈະບໍ່ເຊື່ອຟັງດັ່ງທີ່ພວກເຈົ້າເຊື່ອຟັງຢູ່ໃນວັນນີ້, ຍ້ອນວ່າເມື່ອກ່ອນ, ພວກເຈົ້າທຸກຄົນແມ່ນເປັນລາປ່າທີ່ຢູ່ໃນຖິ່ນທຸລະກັນດານ. ດັ່ງນັ້ນ ສິ່ງທີ່ໄດ້ກ່າວໃນວັນນີ້ ບໍ່ພຽງແຕ່ເຈາະຈົງໃສ່ຄົນຂອງສາສະໜາ ແລະ ນິກາຍຕ່າງໆເທົ່ານັ້ນ ແລະ ກໍບໍ່ແມ່ນເພື່ອຕໍ່ຕ້ານຄວາມຄິດຂອງພວກເຂົາອີກດ້ວຍ; ກົງກັນຂ້າມ ແມ່ນເພື່ອຕໍ່ຕ້ານຄວາມຄິດຂອງພວກເຈົ້າ.

ການພິພາກສາແຫ່ງຄວາມຊອບທຳໄດ້ເລີ່ມຂຶ້ນແລ້ວ. ພຣະເຈົ້າຍັງເຮັດໜ້າທີ່ເປັນເຄື່ອງບູຊາໄຖ່ບາບສຳລັບມະນຸດຢູ່ບໍ? ພຣະເຈົ້າຈະຫຼິ້ນເປັນທ່ານໝໍຜູ້ຍິ່ງໃຫຍ່ສຳລັບຄົນອີກບໍ? ພຣະເຈົ້າບໍ່ມີອຳນາດທີ່ຍິ່ງໃຫຍ່ກວ່ານີ້ບໍ? ຄົນກຸ່ມໜຶ່ງໄດ້ຖືກເຮັດໃຫ້ສົມບູນແລ້ວ ແລະ ໄດ້ຖືກຍົກຂຶ້ນມາຢູ່ຕໍ່ໜ້າບັນລັງ. ພຣະອົງຍັງຈະຂັບໄລ່ຜີສາດ ແລະ ປິ່ນປົວຄົນເຈັບປ່ວຍຢູ່ບໍ? ນີ້ບໍ່ຫຼ້າສະໄໝເກີນໄປບໍ? ຖ້າສິ່ງນີ້ສືບຕໍ່ເປັນແບບນີ້ ການເປັນພະຍານຈະເກີດຂຶ້ນໄດ້ບໍ? ພຣະເຈົ້າໄດ້ຖືກຄຶງໃສ່ໄມ້ກາງແຂນເທື່ອໜຶ່ງແລ້ວ, ດັ່ງນັ້ນ ພຣະອົງຈະຖືກຄຶງກາງແຂນຕະຫຼອດໄປບໍ? ໃນເມື່ອໄດ້ຂັບໄລ່ຜີສາດອອກເທື່ອໜຶ່ງແລ້ວ, ພຣະອົງຈະຂັບໄລ່ພວກມັນອອກຕະຫຼອດໄປບໍ? ນີ້ບໍ່ຖືວ່າເປັນການອັບອາຍຂາຍໜ້າບໍ? ມີພຽງແຕ່ເມື່ອຂັ້ນຕອນນີ້ຂອງພາລະກິດພັດທະນາສູງຂຶ້ນກວ່າຂັ້ນຕອນທີ່ຜ່ານມາເທົ່ານັ້ນ ແຕ່ລະຍຸກຈຶ່ງຈະກ້າວໜ້າຕໍ່ໄປ. ຫຼັງຈາກນັ້ນ ກໍຈະມາເຖິງຍຸກສຸດທ້າຍ ແລະ ວັນນັ້ນກໍຈະມາເຖິງ ວັນທີ່ຍຸກດັ່ງກ່າວຈະສິ້ນສຸດລົງ. ສະນັ້ນ ຄົນທີ່ສະແຫວງຫາຄວາມຈິງຕ້ອງໄດ້ເອົາໃຈໃສ່ໃນການຢັ່ງຮູ້ກ່ຽວກັບນິມິດນີ້. ນີ້ແມ່ນພື້ນຖານ. ທຸກເທື່ອທີ່ເຮົາສົນທະນາກັບພວກເຈົ້າກ່ຽວກັບນິມິດ, ເຮົາເຫັນຕະຫຼອດວ່າ ໜັງຕາຂອງບາງຄົນເລີ່ມຕົກ, ພວກເຂົາເລີ່ມເຫງົານອນ ແລະ ບໍ່ຢາກຟັງ. ຄົນອື່ນຖາມວ່າ: “ເປັນຫຍັງພວກເຈົ້າຈຶ່ງບໍ່ຟັງ?” ພວກເຂົາຕອບວ່າ “ນີ້ບໍ່ໄດ້ຊ່ວຍຊີວິດຂອງຂ້ອຍ ຫຼື ຊ່ວຍໃຫ້ຂ້ອຍເຂົ້າສູ່ຄວາມເປັນຈິງ. ສິ່ງທີ່ພວກເຮົາຕ້ອງການຄືເສັ້ນທາງປະຕິບັດ”. ເມື່ອເຮົາບໍ່ກ່າວເຖິງເສັ້ນທາງປະຕິບັດ ແລະ ກ່າວເຖິງພາລະກິດ, ພວກເຂົາເວົ້າວ່າ “ທັນທີທີ່ພຣະອົງເວົ້າກ່ຽວກັບພາລະກິດ, ຂ້ານ້ອຍກໍ່ເລີ່ມເຫງົານອນ”. ເມື່ອເຮົາເລີ່ມກ່າວເຖິງເສັ້ນທາງປະຕິບັດ, ພວກເຂົາກໍເລີ່ມບັນທຶກຂໍ້ຄວາມໄວ້ ແລະ ເມື່ອເຮົາເລີ່ມກ່າວກ່ຽວກັບພາລະກິດອີກ, ພວກເຂົາກໍບໍ່ຟັງອີກ. ປັດຈຸບັນພວກເຈົ້າຮູ້ສິ່ງທີ່ພວກເຈົ້າຕ້ອງການຢູ່ບໍ? ດ້ານໜຶ່ງແມ່ນວິໄສທັດກ່ຽວກັບພາລະກິດ ແລະ ອີກດ້ານໜຶ່ງແມ່ນການປະຕິບັດຂອງເຈົ້າ. ເຈົ້າຕ້ອງເຂົ້າໃຈທັງສອງດ້ານ. ຖ້າເຈົ້າບໍ່ມີວິໄສທັດໃນການຄົ້ນຫາເພື່ອສ້າງຄວາມກ້າວໜ້າໃນຊີວິດ, ເຈົ້າກໍບໍ່ມີພື້ນຖານ. ຖ້າເຈົ້າມີພຽງເສັ້ນທາງປະຕິບັດເທົ່ານັ້ນ ແລະ ບໍ່ມີວິໄສທັດແມ່ນແຕ່ໜ້ອຍດຽວ ແລະ ບໍ່ມີຄວາມເຂົ້າໃຈຫຍັງເລີຍກ່ຽວກັບພາລະກິດແຫ່ງແຜນການຄຸ້ມຄອງທັງໝົດ, ເຈົ້າຖືວ່າບໍ່ມີດີຫຍັງເລີຍ. ເຈົ້າຕ້ອງເຂົ້າໃຈຄວາມຈິງທາງດ້ານນິມິດ ແລະ ໃນສ່ວນຄວາມຈິງທາງດ້ານປະຕິບັດນັ້ນ, ເຈົ້າກໍຕ້ອງຊອກຫາເສັ້ນທາງປະຕິບັດທີ່ເໝາະສົມເມື່ອເຈົ້າເຂົ້າໃຈສິ່ງນັ້ນແລ້ວ; ເຈົ້າຕ້ອງປະຕິບັດຕາມພຣະທຳ ແລະ ເຂົ້າສູ່ຕາມເງື່ອນໄຂຂອງເຈົ້າ. ນິມິດຕ່າງໆຄືພື້ນຖານ ແລະ ຖ້າເຈົ້າບໍ່ໃສ່ໃຈກັບເລື່ອງນີ້, ເຈົ້າຈະບໍ່ສາມາດຕິດຕາມໄດ້ຈົນເຖິງທີ່ສຸດ. ເມື່ອເຈົ້າມີປະສົບການໃນລັກສະນະນີ້, ເຈົ້າກໍຈະທັງຫຼົງທາງ ຫຼື ລົ້ມລົງ ແລະ ລົ້ມເຫຼວ. ເຈົ້າຈະບໍ່ມີທາງປະສົບຜົນສຳເລັດໄດ້ເລີຍ! ຄົນທີ່ບໍ່ມີວິໄສທັດ

ອັນຍິ່ງໃຫຍ່ເປັນພື້ນຖານຂອງພວກເຂົາ ກໍຈະມີແຕ່ລົ້ມເຫຼວ ແລະ ບໍ່ປະສົບຜົນສຳເລັດ. ເຈົ້າບໍ່ສາມາດຕັ້ງໝັ້ນໄດ້! ເຈົ້າຮູ້ບໍວ່າການເຊື່ອໃນພຣະເຈົ້າແມ່ນຫຍັງ? ເຈົ້າຮູ້ບໍວ່າການຕິດຕາມພຣະເຈົ້າແມ່ນຫຍັງ? ຖ້າປາສະຈາກວິໄສທັດແລ້ວ, ເຈົ້າຈະຍ່າງຕາມເສັ້ນທາງໃດ? ໃນພາລະກິດຂອງປັດຈຸບັນນີ້, ຖ້າເຈົ້າບໍ່ມີວິໄສທັດ ເຈົ້າກໍຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້ເລີຍ. ແລ້ວເຈົ້າເຊື່ອໃຜ? ເປັນຫຍັງເຈົ້າຈຶ່ງເຊື່ອໃນພຣະອົງ? ເປັນຫຍັງເຈົ້າຈຶ່ງຕິດຕາມພຣະອົງ? ເຈົ້າເຫັນຄວາມເຊື່ອຂອງເຈົ້າເປັນເກມຊະນິດໜຶ່ງເທົ່ານັ້ນບໍ? ເຈົ້າຈັດການກັບຊີວິດຂອງເຈົ້າຄືກັບຂອງຫຼິ້ນບໍ? ພຣະເຈົ້າໃນມື້ນີ້ແມ່ນນິມິດທີ່ຍິ່ງໃຫຍ່ທີ່ສຸດ. ເຈົ້າຮູ້ກ່ຽວກັບພຣະອົງຫຼາຍປານໃດ? ເຈົ້າໄດ້ເຫັນພຣະອົງຫຼາຍປານໃດ? ເມື່ອໄດ້ເຫັນພຣະເຈົ້າແຫ່ງປັດຈຸບັນແລ້ວ ພື້ນຖານຂອງການເຊື່ອໃນພຣະເຈົ້າຂອງເຈົ້າໝັ້ນຄົງຢູ່ບໍ? ເຈົ້າຄິດວ່າຕາບໃດທີ່ເຈົ້າຕິດຕາມໃນເສັ້ນທາງທີ່ສັບສົນນີ້, ເຈົ້າຈະໄດ້ຮັບການຊ່ວຍໃຫ້ພົ້ນບາບບໍ? ເຈົ້າຄິດວ່າເຈົ້າສາມາດຈັບປາໃນນໍ້າຂຸ່ນໄດ້ບໍ? ມັນງ່າຍປານນັ້ນພຸ້ນບໍ? ມີຈັກຄວາມຄິດທີ່ກ່ຽວກັບສິ່ງທີ່ພຣະເຈົ້າກ່າວເຖິງໃນມື້ນີ້ ທີ່ເຈົ້າໄດ້ປ່ອຍວາງລົງ? ເຈົ້າມີວິໄສທັດກ່ຽວກັບພຣະເຈົ້າແຫ່ງປັດຈຸບັນບໍ? ຄວາມເຊື່ອຂອງເຈົ້າກ່ຽວກັບພຣະເຈົ້າແຫ່ງປັດຈຸບັນແມ່ນຢູ່ໃສ? ເຈົ້າເຊື່ອຢູ່ສະເໝີວ່າ ເຈົ້າຈະສາມາດຮັບເອົາພຣະອົງ[ຂ] ໂດຍການຕິດຕາມພຣະອົງເທົ່ານັ້ນ ຫຼື ພຽງແຕ່ໂດຍການເຫັນພຣະອົງ ແລະ ຈະບໍ່ມີໃຜທີ່ສາມາດຂັບໄລ່ເຈົ້າໄດ້. ຢ່າຄິດວ່າການຕິດຕາມພຣະເຈົ້າງ່າຍປານນັ້ນ. ສິ່ງສຳຄັນກໍຄືເຈົ້າຕ້ອງຮູ້ຈັກພຣະອົງ, ເຈົ້າຕ້ອງຮູ້ຈັກພາລະກິດຂອງພຣະອົງ ແລະ ເຈົ້າຕ້ອງມີຄວາມປະສົງທີ່ຈະທົນກັບຄວາມຍາກລຳບາກເພື່ອພຣະອົງ, ມີຄວາມປະສົງທີ່ຈະສະຫຼະຊີວິດຂອງເຈົ້າເພື່ອພຣະອົງ ແລະ ມີຄວາມປະສົງທີ່ຈະຖືກເຮັດໃຫ້ສົມບູນໂດຍພຣະອົງ. ນີ້ຄືວິໄສທັດທີ່ເຈົ້າຄວນມີ. ມັນຈະບໍ່ໄດ້ຜົນຖ້າເຈົ້າຄິດໃສ່ແຕ່ການໄດ້ຮັບພຣະຄຸນຢູ່ສະເໝີ. ຢ່າໄດ້ສົມມຸດວ່າ ພຣະເຈົ້າສະຖິດພຽງເພື່ອຄວາມສຸກຂອງຄົນ ແລະ ເພື່ອປະທານພຣະຄຸນໃຫ້ແກ່ຜູ້ຄົນ. ເຈົ້າຄິດຜິດແລ້ວ! ຖ້າຜູ້ຄົນບໍ່ສາມາດສ່ຽງຊີວິດຂອງພວກເຂົາເພື່ອຕິດຕາມ, ຖ້າຜູ້ຄົນບໍ່ສາມາດປະຖິ້ມທຸກຢ່າງທີ່ມີຢູ່ໃນໂລກເພື່ອຕິດຕາມແລ້ວ, ພວກເຂົາກໍຈະບໍ່ສາມາດຕິດຕາມຈົນເຖິງທີ່ສຸດໄດ້ຢ່າງແນ່ນອນ! ເຈົ້າຕ້ອງມີວິໄສທັດເປັນພື້ນຖານຂອງເຈົ້າ. ຖ້າມື້ແຫ່ງການທົນທຸກທໍລະມານກັບໄພພິບັດຂອງເຈົ້າມາເຖິງ, ເຈົ້າຄວນເຮັດແນວໃດ? ເຈົ້າຍັງຈະສາມາດຕິດຕາມໄດ້ຢູ່ບໍ? ຢ່າເວົ້າໂລເລວ່າ ເຈົ້າຈະສາມາດຕິດຕາມຈົນເຖິງທີ່ສຸດ. ກ່ອນອື່ນ ເຈົ້າຄວນຈະມືນຕາຂອງເຈົ້າອອກໃຫ້ກວ້າງເພື່ອເບິ່ງວ່າ ປັດຈຸບັນນີ້ແມ່ນເວລາຫຍັງ. ເຖິງແມ່ນວ່າປັດຈຸບັນນີ້ພວກເຈົ້າອາດເປັນຄືກັບເສົາວິຫານ, ແຕ່ມັນກໍຈະມີວັນນັ້ນມາເຖິງເມື່ອເສົາເຫຼົ່ານີ້ທັງໝົດຖືກດ້ວງເຈາະເຮັດໃຫ້ວິຫານພັງທະລາຍລົງ ຍ້ອນວ່າປັດຈຸບັນນີ້ ມີຫຼາຍວິໄສທັດທີ່ເຈົ້າຍັງຂາດຢູ່. ສິ່ງທີ່ພວກເຈົ້າເອົາໃຈໃສ່ ມີພຽງແຕ່ໂລກນ້ອຍໆຂອງພວກເຈົ້າເອງເທົ່ານັ້ນ ແລະ ພວກເຈົ້າບໍ່ຮູ້ວ່າ ແມ່ນຫຍັງຄືສິ່ງທີ່ເຊື່ອຖືໄດ້ທີ່ສຸດ ແລະ ແມ່ນຫຍັງຄືເສັ້ນທາງຂອງການສະແຫວງຫາທີ່ເໝາະສົມທີ່ສຸດ. ພວກເຈົ້າບໍ່ໄດ້ໃສ່ໃຈກັບວິໄສທັດຂອງພາລະກິດໃນວັນນີ້ ແລະ ພວກເຈົ້າບໍ່ໄດ້ຍຶດຖືເອົາສິ່ງເຫຼົ່ານີ້ໄວ້ໃນໃຈຂອງພວກເຈົ້າ. ພວກເຈົ້າ

ຂ ຂໍ້ຄວາມຕົ້ນສະບັບບໍ່ມີຄຳວ່າ “ພຣະອົງ”.

ເຄີຍຄິດບໍວ່າ ມື້ໜຶ່ງພຣະເຈົ້າຂອງພວກເຈົ້າຈະເອົາພວກເຈົ້າໄປໄວ້ໃນສະຖານທີ່ທີ່ພວກເຈົ້າບໍ່ຄຸ້ນເຄີຍທີ່ສຸດ? ພວກເຈົ້າສາມາດຈິນຕະນາການໄດ້ບໍວ່າພວກເຈົ້າຈະກາຍເປັນຫຍັງ ຖ້າວັນໜຶ່ງເຮົາຍາດຊິງເອົາທຸກສິ່ງໄປຈາກພວກເຈົ້າ? ພະລັງຂອງພວກເຈົ້າໃນມື້ນັ້ນຍັງຈະເປັນຄືຕອນນີ້ຢູ່ບໍ? ຄວາມເຊື່ອຂອງພວກເຈົ້າຈະມີອີກບໍ? ໃນການຕິດຕາມພຣະເຈົ້າ, ພວກເຈົ້າຕ້ອງຮູ້ນິມິດທີ່ຍິ່ງໃຫຍ່ທີ່ສຸດ ນັ້ນກໍຄື "ພຣະເຈົ້າ". ນີ້ແມ່ນເລື່ອງທີ່ສຳຄັນທີ່ສຸດ. ພ້ອມນີ້, ຈົ່ງຢ່າຄິດວ່າການແຍກອອກຈາກຜູ້ຄົນທາງຝ່າຍໂລກເພື່ອກາຍເປັນຜູ້ສັກສິດ ແລ້ວພວກເຈົ້າຈະໄດ້ເປັນຄົນໃນຄອບຄົວຂອງພຣະເຈົ້າ. ທຸກມື້ນີ້ ພຣະເຈົ້າເອງຄືຜູ້ປະຕິບັດພາລະກິດທ່າມກາງສິ່ງຊົງສ້າງ. ພຣະເຈົ້າໄດ້ສະເດັດມາຢູ່ທ່າມກາງຜູ້ຄົນເພື່ອປະຕິບັດພາລະກິດຂອງພຣະອົງເອງ ແລະ ບໍ່ແມ່ນເພື່ອມາດຳເນີນການເຜີຍແຜ່. ໃນທ່າມກາງພວກເຈົ້າ, ບໍ່ມີຜູ້ຄົນແມ່ນແຕ່ໜ້ອຍດຽວທີ່ສາມາດຮູ້ວ່າພາລະກິດໃນປັດຈຸບັນນີ້ແມ່ນພາລະກິດຂອງພຣະເຈົ້າແຫ່ງສະຫວັນຜູ້ທີ່ກາຍເປັນເນື້ອໜັງ. ນີ້ບໍ່ໄດ້ກ່ຽວກັບການເຮັດໃຫ້ພວກເຈົ້າເປັນຄົນທີ່ມີພອນສະຫວັນ. ກົງກັນຂ້າມ, ມັນແມ່ນເພື່ອຊ່ວຍພວກເຈົ້າໃຫ້ຮູ້ຈັກຄວາມໝາຍຂອງຊີວິດມະນຸດ, ຮູ້ຈັກຈຸດໝາຍປາຍທາງຂອງມະນຸດຊາດ ແລະ ເພື່ອຊ່ວຍພວກເຈົ້າໃຫ້ຮູ້ຈັກພຣະເຈົ້າ ແລະ ຄວາມສົມບູນຂອງພຣະອົງ. ເຈົ້າຄວນຮູ້ວ່າ ເຈົ້າແມ່ນສິ່ງຖືກສ້າງທີ່ຢູ່ໃນກຳມືຂອງພຣະຜູ້ສ້າງ. ສິ່ງທີ່ເຈົ້າຄວນເຂົ້າໃຈ, ສິ່ງທີ່ເຈົ້າຄວນປະຕິບັດ ແລະ ວິທີທີ່ເຈົ້າຄວນຕິດຕາມພຣະເຈົ້າ; ສິ່ງເຫຼົ່ານີ້ບໍ່ແມ່ນຄວາມຈິງທີ່ເຈົ້າຄວນເຂົ້າໃຈບໍ? ພວກມັນບໍ່ແມ່ນນິມິດທີ່ເຈົ້າຄວນເຫັນບໍ?

ເມື່ອຄົນມີນິມິດ ພວກເຂົາກໍຈະມີພື້ນຖານ. ເມື່ອເຈົ້າປະຕິບັດຢູ່ບົນພື້ນຖານນີ້, ການເຂົ້າກໍຈະງ່າຍຂຶ້ນຫຼາຍ. ດ້ວຍວິທີນີ້ ເຈົ້າຈະບໍ່ມີຄວາມກັງວົນເມື່ອເຈົ້າມີພື້ນຖານຂອງການເຂົ້າເຖິງ ແລະ ມັນຈະງ່າຍຫຼາຍສຳລັບເຈົ້າທີ່ຈະເຂົ້າເຖິງ. ການເຂົ້າໃຈນິມິດໃນລັກສະນະນີ້ ແລະ ການເຂົ້າໃຈພາລະກິດຂອງພຣະເຈົ້າໃນລັກສະນະນີ້ຄືກະແຈສຳຄັນ. ພວກເຈົ້າຕ້ອງປະກອບດ້ວຍສິ່ງນີ້. ຖ້າເຈົ້າບໍ່ປະກອບດ້ວຍຄວາມຈິງໃນດ້ານນີ້ ແລະ ກ່າວເຖິງພຽງເສັ້ນທາງຂອງການປະຕິບັດເທົ່ານັ້ນ, ເຈົ້າກໍຈະເຕັມໄປດ້ວຍຂໍ້ບົກຜ່ອງຢ່າງຫຼວງຫຼາຍ. ເຮົາໄດ້ຄົ້ນພົບວ່າພວກເຈົ້າຫຼາຍຄົນບໍ່ໄດ້ເໜັ້ນໜັກໃນດ້ານນີ້ ແລະ ເມື່ອພວກເຈົ້າຟັງຄວາມຈິງດ້ານນີ້ ພວກເຈົ້າເບິ່ງຄືກັບວ່າພຽງແຕ່ຟັງຄຳເວົ້າ ແລະ ທິດສະດີເທົ່ານັ້ນ. ມື້ໜຶ່ງເຈົ້າຈະຜະເຊີນກັບການສູນເສຍ. ຕອນນີ້ມີພຣະທຳບາງຂໍ້ທີ່ເຈົ້າບໍ່ເຂົ້າໃຈ ແລະ ບໍ່ຍອມຮັບເອົາຂໍ້ພຣະທຳດັ່ງກ່າວ; ໃນກໍລະນີນີ້ ເຈົ້າຄວນສະແຫວງຫາຢ່າງອົດທົນ ແລ້ວວັນທີ່ເຈົ້າເຂົ້າໃຈກໍຈະມາເຖິງ. ຈົ່ງປະກອບມີນິມິດເທື່ອລະໜ້ອຍ. ເຖິງແມ່ນວ່າເຈົ້າຈະເຂົ້າໃຈ ຄຳສອນທາງຝ່າຍວິນຍານພຽງແຕ່ສອງສາມຂໍ້, ມັນກໍຍັງດີກວ່າການບໍ່ເອົາໃຈໃສ່ຕໍ່ນິມິດ ແລະ ຍັງດີກວ່າບໍ່ເຂົ້າໃຈຫຍັງເລີຍ. ທັງໝົດນີ້ເປັນປະໂຫຍດຕໍ່ການເຂົ້າສູ່ຂອງເຈົ້າ ແລະ ມັນຈະກຳຈັດຄວາມສົງໄສຂອງເຈົ້າອອກໄປ. ມັນດີກວ່າການທີ່ເຈົ້າປະກອບມີຄວາມຄິດຕ່າງໆ. ມັນຈະເປັນການດີກວ່າຫຼາຍ ຖ້າເຈົ້າມີນິມິດເຫຼົ່ານີ້ເປັນພື້ນຖານ. ເຈົ້າຈະບໍ່ມີຄວາມວິຕົກກັງວົນໃດໆ, ເຂົ້າເຖິງດ້ວຍຄວາມພາກພູມໃຈ ແລະ ຢ່າງໝັ້ນໃຈ. ເປັນຫຍັງຈິ່ງໄປສົນໃຈຕິດຕາມຢ່າງສັບສົນ ແລະ ໜ້າສົງໄສຢູ່ຕະຫຼອດ? ນັ້ນຈະບໍ່ຄືການເອົາຫົວຂອງເຈົ້າຝັງໃສ່ດິນຊາຍບໍ? ມັນງົດງາມພຽງໃດທີ່ຈະເຂົ້າໄປໃນອານາຈັກດ້ວຍຄວາມພາກພູມໃຈ ແລະ ດ້ວຍຄວາມ

ໝັ້ນໃຈ! ເປັນຫຍັງຈຶ່ງເຕັມໄປດ້ວຍຄວາມວິຕົກກັງວົນ? ເຈົ້າບໍ່ໄດ້ເຮັດໃຫ້ເຈົ້າເອງພຽງໄດ້ຮັບຄວາມຍາກລຳບາກເທົ່ານັ້ນບໍ? ເມື່ອເຈົ້າໄດ້ຮັບຄວາມເຂົ້າໃຈກ່ຽວກັບພາລະກິດຂອງພຣະເຢໂຮວາ, ກ່ຽວກັບພາລະກິດຂອງພຣະເຢຊູ ແລະ ກ່ຽວກັບຂັ້ນຕອນນີ້ຂອງພາລະກິດ, ເມື່ອນັ້ນເຈົ້າກໍຈະມີພື້ນຖານ. ຕອນນີ້ ເຈົ້າອາດຄິດວ່າມັນງ່າຍຫຼາຍ. ບາງຄົນເວົ້າວ່າ "ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດອັນຍິ່ງໃຫຍ່ ແລະ ເມື່ອເວລານັ້ນມາເຖິງ ຂ້ານ້ອຍຈະມີພຣະທຳທັງໝົດ. ຄວາມຈິງແລ້ວຂ້ານ້ອຍບໍ່ເຂົ້າໃຈຢ່າງແທ້ຈິງໃນຕອນນີ້ກໍຍ້ອນວ່າພຣະວິນຍານບໍລິສຸດຍັງບໍ່ໄດ້ໃຫ້ຄວາມສະຫວ່າງແກ່ຂ້ານ້ອຍຫຼາຍເທື່ອ". ມັນບໍ່ແມ່ນເລື່ອງງ່າຍເລີຍ; ມັນບໍ່ແມ່ນວ່າ ເຈົ້າຈະເຕັມໃຈຍອມຮັບຄວາມຈິງ[ຄ] ໃນຕອນນີ້ ແລະ ຫຼັງຈາກນັ້ນ ເມື່ອເວລານັ້ນມາເຖິງ ເຈົ້າກໍຈະໃຊ້ມັນໄດ້ຢ່າງຊຳນານ. ມັນບໍ່ແມ່ນແບບນັ້ນ! ເຈົ້າເຊື່ອວ່າຕອນນີ້ເຈົ້າມີຄວາມເຂົ້າໃຈທຸກຢ່າງ ແລະ ຄົງຈະບໍ່ມີບັນຫາທີ່ຈະຕອບຄືນຂອງສາສະໜາ ແລະ ນັກທິດສະດີຜູ້ຍິ່ງໃຫຍ່ເຫຼົ່ານັ້ນ ແລະ ແມ່ນແຕ່ໂຕ້ຖຽງເພື່ອພິສູດວ່າພວກເຂົາຜິດ. ເຈົ້າຈະເຮັດສິ່ງນັ້ນໄດ້ແທ້ບໍ? ເຈົ້າສາມາດເວົ້າເຖິງຄວາມເຂົ້າໃຈອັນໃດໄດ້ແດ່ຈາກປະສົບການພຽງຜິວເຜີນຂອງເຈົ້າ? ການປະກອບມີຄວາມຈິງ, ການຕໍ່ສູ້ກັບສົງຄາມແຫ່ງຄວາມຈິງ ແລະ ການເປັນພະຍານໃຫ້ແກ່ພຣະນາມຂອງພຣະເຈົ້າ ສິ່ງເຫຼົ່ານີ້ບໍ່ແມ່ນແບບທີ່ເຈົ້າຄິດ ເຊິ່ງຕາບໃດທີ່ພຣະເຈົ້າຍັງປະຕິບັດພາລະກິດຢູ່ ທຸກສິ່ງກໍຈະສຳເລັດລົງ. ໃນເວລານັ້ນ ເຈົ້າອາດຈະຖືກເຮັດໃຫ້ສັບສົນດ້ວຍບາງຄຳຖາມ ແລະ ເຈົ້າອາດຈະຕົກຕະລຶງ. ສິ່ງສຳຄັນຄື ເຈົ້າມີຄວາມຊັດເຈນກ່ຽວກັບຂັ້ນຕອນນີ້ຂອງພາລະກິດ ຫຼື ບໍ່ ແລະ ເຈົ້າເຂົ້າໃຈມັນຢ່າງແທ້ຈິງຫຼາຍປານໃດ. ຖ້າເຈົ້າບໍ່ສາມາດເອົາຊະນະກຳລັງຂອງສັດຕູໄດ້ ແລະ ບໍ່ສາມາດເອົາຊະນະກອງກຳລັງຂອງສາສະໜາໄດ້, ເຈົ້າຈະບໍ່ກາຍເປັນຄົນທີ່ໄຮ້ປະໂຫຍດບໍ? ຖ້າເຈົ້າໄດ້ປະສົບກັບພາລະກິດຂອງມື້ນີ້, ໄດ້ເຫັນມັນດ້ວຍຕາຂອງເຈົ້າເອງ ແລະ ໄດ້ຍິນມັນດ້ວຍຫູຂອງເຈົ້າເອງ, ແຕ່ສຸດທ້າຍແລ້ວເຈົ້າບໍ່ສາມາດເປັນພະຍານໄດ້, ເຈົ້າຍັງຈະມີໜ້າໃຊ້ຊີວິດຢູ່ຕໍ່ໄປອີກບໍ? ເຈົ້າຈະສາມາດພົບໜ້າໃຜໄດ້ຢູ່ບໍ? ບັດນີ້ ຢ່າໄດ້ຄິດງ່າຍໆແບບນັ້ນອີກ. ພາລະກິດໃນອະນາຄົດຈະບໍ່ງ່າຍແບບທີ່ເຈົ້າຄິດ. ການຕໍ່ສູ້ກັບສົງຄາມແຫ່ງຄວາມຈິງນັ້ນ ມັນບໍ່ໄດ້ງ່າຍ ຫຼື ງ່າຍດາຍປານນັ້ນ. ຕອນນີ້ ເຈົ້າຕ້ອງປະກອບມີຄວາມຈິງ. ຖ້າບໍ່ປະກອບມີຄວາມຈິງໃນຕອນນີ້, ເມື່ອເວລານັ້ນມາເຖິງ ແລະ ເມື່ອພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດໃນຮູບແບບເໜືອທຳມະຊາດອີກຕໍ່ໄປ, ເມື່ອນັ້ນເຈົ້າກໍຈະສັບສົນ.

ຄ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ "ຄວາມຈິງ".

# ວິທີທີ່ເຈົ້າຄວນຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງ

ໃນປັດຈຸບັນ ພວກເຈົ້າໄດ້ຢູ່ໃນໄລຍະສຸດທ້າຍຂອງເສັ້ນທາງ ແລະ ມັນແມ່ນສ່ວນທີ່ສຳຄັນຂອງເສັ້ນທາງນັ້ນ. ບາງເທື່ອ ເຈົ້າໄດ້ອົດທົນກັບການທົນທຸກຫຼາຍພໍສົມຄວນ, ໄດ້ປະຕິບັດພາລະກິດຫຼາຍຢ່າງ, ເດີນທາງໃນຫຼາຍເສັ້ນທາງ ແລະ ຟັງບົດເທດສະໜາຫຼາຍຄັ້ງ; ບາງເທື່ອ ມັນກໍບໍ່ໄດ້ງ່າຍທີ່ຈະມາເຖິງບ່ອນທີ່ເຈົ້າຢູ່ໃນຕອນນີ້. ຖ້າເຈົ້າບໍ່ສາມາດແບກຮັບເອົາການທົນທຸກທີ່ເຈົ້າກຳລັງຜະເຊີນ ແລະ ຖ້າເຈົ້າສືບຕໍ່ເຮັດຄືກັບທີ່ເຈົ້າເຄີຍເຮັດໃນອະດີດ, ແລ້ວເຈົ້າກໍບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ຄຳເວົ້າເຫຼົ່ານີ້ບໍ່ແມ່ນເພື່ອເຮັດໃຫ້ເຈົ້າຢ້ານ, ມັນຄືຄວາມຈິງ. ຫຼັງຈາກທີ່ເປໂຕໄດ້ຜະເຊີນກັບພາລະກິດຂອງພຣະເຈົ້າຫຼາຍຢ່າງ, ລາວຈຶ່ງໄດ້ຮັບຄວາມເຂົ້າໃຈບາງຢ່າງ ແລະ ການເຫັນແຈ້ງເຖິງຫຼາຍຢ່າງ. ລາວຍັງເຂົ້າໃຈຫຼັກການຂອງການຮັບໃຊ້ຫຼາຍພໍສົມຄວນ ແລະ ຫຼັງຈາກນັ້ນ ລາວກໍສາມາດອຸທິດຕົນຢ່າງສົມບູນຕໍ່ສິ່ງທີ່ພຣະເຢຊູໄດ້ມອບໝາຍໄວ້ໃຫ້ກັບລາວ. ການຫຼໍ່ຫຼອມອັນຍິ່ງໃຫຍ່ທີ່ລາວໄດ້ຮັບສ່ວນໃຫຍ່ແລ້ວ ແມ່ນຍ້ອນສິ່ງຕ່າງໆທີ່ລາວເຮັດ, ລາວຮູ້ສຶກວ່າລາວຕິດໜີ້ພຣະເຈົ້າຢ່າງຫຼາຍ ແລະ ລາວຈະບໍ່ສາມາດທົດແທນສິ່ງນັ້ນໃຫ້ກັບພຣະອົງໄດ້. ເປໂຕຍັງເຂົ້າໃຈອີກວ່າ ມະນຸດຊາດເສື່ອມຊາມຫຼາຍ, ດ້ວຍເຫດນັ້ນລາວຈຶ່ງມີຄວາມສຳນຶກຜິດ. ພຣະເຢຊູໄດ້ກ່າວຫຼາຍໆສິ່ງຕໍ່ເປໂຕ ແຕ່ໃນເວລາທີ່ມີການກ່າວສິ່ງເຫຼົ່ານີ້ນັ້ນ ລາວມີຄວາມເຂົ້າໃຈພຽງແຕ່ໜ້ອຍດຽວ. ບາງຄັ້ງ ລາວຍັງມີຄວາມຕໍ່ຕ້ານ ແລະ ຄວາມກະບົດ. ຫຼັງຈາກທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນ, ລາວກໍມີຄວາມຕື່ນຕົວຂຶ້ນເລັກນ້ອຍ ແລະ ລາວກໍຮູ້ສຶກຜິດຢ່າງຮຸນແຮງ. ໃນທີ່ສຸດ, ມັນກໍເຖິງຈຸດທີ່ລາວຮູ້ສຶກວ່າ ມັນຮັບບໍ່ໄດ້ທີ່ຈະມີແນວຄິດທີ່ບໍ່ຖືກຕ້ອງ. ລາວຮູ້ຈັກສະພາວະຂອງລາວເປັນຢ່າງດີ ແລະ ລາວຍັງຮູ້ຈັກເປັນຢ່າງດີເຖິງຄວາມບໍລິສຸດຂອງພຣະຜູ້ເປັນເຈົ້າ. ຜົນຕາມມາກໍຄື ຫົວໃຈແຫ່ງຄວາມຮັກສຳລັບພຣະຜູ້ເປັນເຈົ້າໄດ້ເຕີບໃຫຍ່ໃນລາວຫຼາຍຍິ່ງຂຶ້ນ ແລະ ລາວໃສ່ໃຈກັບຊີວິດຂອງລາວຫຼາຍຂຶ້ນ. ຍ້ອນສິ່ງນີ້ ລາວຈຶ່ງທົນທຸກຕໍ່ຄວາມລຳບາກຢ່າງໜັກ ແລະ ເຖິງແມ່ນໃນບາງຄັ້ງ ມັນຄືກັບວ່າ ລາວມີຄວາມເຈັບປ່ວຍຂັ້ນຮຸນແຮງ ແລະ ເບິ່ງຄືກັບວ່າລາວຕາຍແລ້ວ, ຫຼັງຈາກທີ່ຖືກຫຼໍ່ຫຼອມໃນລັກສະນະນີ້ເປັນເວລາຫຼາຍຄັ້ງ, ລາວຈຶ່ງມີຄວາມເຂົ້າໃຈກ່ຽວກັບຕົນເອງຫຼາຍຂຶ້ນ ແລະ ພັດທະນາຄວາມຮັກທີ່ແທ້ຈິງສຳລັບພຣະຜູ້ເປັນເຈົ້າ. ສາມາດເວົ້າໄດ້ວ່າ ທັງຊີວິດຂອງລາວແມ່ນຖືກໃຊ້ໃນການຫຼໍ່ຫຼອມ ແລະ ຍິ່ງໄປກວ່ານັ້ນ ກໍຖືກໃຊ້ໃນການຕີສອນ. ປະສົບການຂອງລາວແຕກຕ່າງຈາກບຸກຄົນອື່ນໆ ແລະ ຄວາມຮັກຂອງລາວກໍລື່ນຄົນອື່ນໆທີ່ບໍ່ໄດ້ຖືກເຮັດໃຫ້ສົມບູນ. ເຫດຜົນທີ່ລາວຖືກເລືອກເປັນແບບຢ່າງກໍຄື ລາວປະສົບກັບຄວາມທໍລະມານຫຼາຍທີ່ສຸດໃນຊົ່ວຊີວິດຂອງລາວ ແລະ ປະສົບການຂອງລາວກໍເປັນສິ່ງທີ່ມີຜົນສຳເລັດທີ່ສຸດ. ຖ້າພວກເຈົ້າສາມາດເດີນໃນໄລຍະສຸດທ້າຍຂອງເສັ້ນທາງຄືກັນກັບເປໂຕແທ້ຈິງ, ແລ້ວກໍຈະບໍ່ມີສິ່ງຖືກສ້າງແມ່ນແຕ່ສິ່ງດຽວທີ່ສາມາດຍາດເອົາການອວຍພອນຂອງພວກເຈົ້າໄດ້.

ເປໂຕເປັນມະນຸດທີ່ມີຄວາມສຳນຶກ, ແຕ່ເຖິງແມ່ນວ່າມີຄວາມເປັນມະນຸດທີ່ລາວມີ, ລາວກໍມີແນວຄິດຫຼາຍຢ່າງທີ່ຕໍ່ຕ້ານ ແລະ ກະບົດໂດຍຫຼີກເວັ້ນບໍ່ໄດ້ ໃນລະຫວ່າງເວລາທີ່ລາວເລີ່ມຕິດຕາມ

ພຣະເຢຊູໃນຄັ້ງທຳອິດ. ແຕ່ໃນຂະນະທີ່ລາວກຳລັງຕິດຕາມພຣະເຢຊູຢູ່ນັ້ນ, ລາວບໍ່ໄດ້ຖືສິ່ງເຫຼົ່ານີ້ເປັນເລື່ອງຈິງຈັງ ແລະ ລາວເຊື່ອວ່າ ນີ້ເປັນພຽງເສັ້ນທາງທີ່ຜູ້ຄົນຄວນເປັນແບບນັ້ນ. ສະນັ້ນ, ໃນຕອນທຳອິດລາວບໍ່ໄດ້ຮູ້ສຶກວ່າຖືກຕຳນິ ຫຼື ຖືກຈັດການ. ພຣະເຢຊູບໍ່ໄດ້ຈິງຈັງກັບທ່າທີທີ່ລາວມີ ຫຼື ພຣະອົງບໍ່ໄດ້ໃສ່ໃຈຕໍ່ສິ່ງເຫຼົ່ານັ້ນ. ພຣະອົງມີແຕ່ສືບຕໍ່ກັບພາລະກິດທີ່ພຣະອົງຄວນປະຕິບັດ. ພຣະອົງບໍ່ເຄີຍຈັບຜິດເປໂຕ ແລະ ຄົນອື່ນໆ. ເຈົ້າອາດເວົ້າວ່າ "ເປັນໄປໄດ້ບໍວ່າ ພຣະເຢຊູບໍ່ຮູ້ຈັກກ່ຽວກັບແນວຄິດເຫຼົ່ານີ້ທີ່ພວກເຂົາມີ?" ເປັນໄປບໍ່ໄດ້ເລີຍ! ມັນເປັນຍ້ອນວ່າ ພຣະອົງເຂົ້າໃຈເປໂຕດີ. ແທ້ຈິງແລ້ວ ສາມາດເວົ້າໄດ້ວ່າ ພຣະອົງມີຄວາມເຂົ້າໃຈຫຼາຍກ່ຽວກັບລາວ ຈົນວ່າພຣະອົງບໍ່ໄດ້ມີມາດຕະການໃດເລີຍຕໍ່ເປໂຕ. ພຣະອົງກຽດຊັງມະນຸດຊາດ ແຕ່ຍັງເມດຕາພວກເຂົາ. ໃນປັດຈຸບັນ ບໍ່ແມ່ນມີຫຼາຍຄົນໃນທ່າມກາງພວກເຈົ້າທີ່ຕໍ່ຕ້ານຄືກັນກັບໂປໂລ ແລະ ມີແນວຄິດຄືກັບເປໂຕທີ່ມີຕໍ່ພຣະເຢຊູເຈົ້າໃນເວລານັ້ນບໍ? ເຮົາກຳລັງບອກເຈົ້າວ່າ ມັນຈະເປັນການດີຫຼາຍຖ້າເຈົ້າບໍ່ເຊື່ອໃນຄວາມຮູ້ສຶກທີສາມຂອງເຈົ້າຫຼາຍເກີນໄປ, ຄວາມຮູ້ສຶກຮັບຮູ້ຂອງເຈົ້າ ເຊິ່ງຄວາມຮູ້ສຶກຂອງເຈົ້າເພິ່ງພາບໍ່ໄດ້ ແລະ ຖືກທຳລາຍຢ່າງສິ້ນເຊີງໂດຍຄວາມເສື່ອມຊາມຂອງຊາຕານເປັນເວລາດົນນານມາແລ້ວ. ເຈົ້າຄິດບໍວ່າ ຄວາມຮູ້ສຶກຮັບຮູ້ຂອງເຈົ້າສົມບູນແທ້ຈິງ ແລະ ບໍ່ມີຈຸດບົກຜ່ອງ? ໂປໂລຕໍ່ຕ້ານພຣະເຢຊູເຈົ້າຫຼາຍຄັ້ງ ແຕ່ພຣະເຢຊູກໍບໍ່ໄດ້ມີທ່າທີໃດໆ. ເປັນໄປໄດ້ບໍທີ່ພຣະເຢຊູສາມາດຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ, ແຕ່ພຣະອົງບໍ່ສາມາດຂັບໄລ່ "ຜີຮ້າຍ" ທີ່ຢູ່ໃນໂປໂລ? ເປັນຫຍັງ ຫຼັງຈາກທີ່ພຣະເຢຊູຟື້ນຄືນມາ ແລະ ຂຶ້ນສູ່ສະຫວັນ ແລະ ໃນຂະນະທີ່ໂປໂລສືບຕໍ່ຈັບກຸມສາວົກຂອງພຣະເຢຊູແບບບໍ່ມີເຫດຜົນຢູ່ນັ້ນ, ໃນທີ່ສຸດ ພຣະເຢຊູກໍປະກົດຕໍ່ໜ້າລາວໃນເສັ້ນທາງສູ່ເມືອງດາມັສກັດ ແລະ ໂຈມຕີລາວຈົນລົ້ມລົງ? ເປັນໄປໄດ້ບໍທີ່ພຣະເຢຊູເຈົ້າສະແດງທ່າທີຊ້າເກີນໄປ? ຫຼື ເປັນຍ້ອນພຣະອົງບໍ່ມີສິດອຳນາດໃນຕອນທີ່ພຣະອົງເປັນມະນຸດບໍ? ເຈົ້າຄິດວ່າ ເມື່ອເຈົ້າທຳລາຍຢ່າງລັບໆ ແລະ ຕໍ່ຕ້ານລັບຫຼັງເຮົາ, ແລ້ວເຮົາຈະບໍ່ຮູ້ບໍ? ເຈົ້າຄິດວ່າ ເສດເຫຼືອຂອງແສງສະຫວ່າງທີ່ເຈົ້າໄດ້ຮັບຈາກພຣະວິນຍານບໍລິສຸດ ຈະສາມາດນຳໃຊ້ເພື່ອຕໍ່ຕ້ານເຮົາໄດ້ບໍ? ເມື່ອເປໂຕຍັງບໍ່ພົ້ນວຸດທິພາວະນັ້ນ, ລາວມີແນວຄິດຫຼາຍຢ່າງຕໍ່ພຣະເຢຊູ, ແລ້ວເປັນຫຍັງລາວຈຶ່ງບໍ່ໄດ້ຮັບການປະນາມ? ໃນຕອນນີ້, ຫຼາຍຄົນກຳລັງເຮັດສິ່ງຕ່າງໆໂດຍປາສະຈາກການປະນາມ ແລະ ແມ່ນແຕ່ເມື່ອພວກເຂົາຖືກບອກວ່າ ການເຮັດແບບນັ້ນບໍ່ແມ່ນສິ່ງທີ່ຖືກຕ້ອງ, ພວກເຂົາກໍຍັງບໍ່ຟັງ. ທັງໝົດນັ້ນບໍ່ແມ່ນຍ້ອນຄວາມກະບົດຂອງມະນຸດບໍ? ໃນປັດຈຸບັນ ເຮົາໄດ້ເວົ້າຫຼາຍຢ່າງແລ້ວ, ແຕ່ເຈົ້າກໍຍັງຂາດແມ່ນແຕ່ເສດສ່ວນຄວາມເຂົ້າໃຈໃນຈິດສຳນຶກ, ແລ້ວເຈົ້າຈະສາມາດຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງຈົນເຖິງຕອນຈົບໄດ້ແນວໃດ? ເຈົ້າບໍ່ຮູ້ສຶກບໍວ່າ ສິ່ງນີ້ຄືບັນຫາທີ່ໃຫຍ່ຫຼວງ?

ຫຼັງຈາກທີ່ຜູ້ຄົນຖືກເອົາຊະນະ ພວກເຂົາກໍສາມາດເຊື່ອຟັງການປັ້ນແຕ່ງຂອງພຣະເຈົ້າ; ພວກເຂົາມີທັງຄວາມເຊື່ອຂອງພວກເຂົາ ແລະ ຄວາມປະສົງຂອງພວກເຂົາທີ່ຈະຮັກພຣະເຈົ້າ ແລະ ພວກເຂົາກໍເພິ່ງພາສິ່ງເຫຼົ່ານີ້ເພື່ອຕິດຕາມພຣະອົງ. ຈະສາມາດຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງໄດ້ແນວໃດ? ໃນມື້ທີ່ເຈົ້າພະເຊີນກັບຄວາມລຳບາກຍາກແຄ້ນ, ເຈົ້າຕ້ອງອົດທົນຕໍ່ຄວາມລຳບາກທຸກຢ່າງ ແລະ ເຈົ້າຕ້ອງມີຄວາມປະສົງທີ່ຈະທົນທຸກ; ດ້ວຍວິທີນີ້ເທົ່ານັ້ນ ເຈົ້າຈຶ່ງສາມາດເຂົ້າສູ່ໄລຍະນີ້ຂອງເສັ້ນທາງໄດ້.

ເຈົ້າຄິດວ່າ ມັນງ່າຍທີ່ຈະຮັບເອົາໄລຍະຂອງເສັ້ນທາງນີ້ບໍ? ເຈົ້າຄວນຮູ້ຈັກໜ້າທີ່ທີ່ເຈົ້າຄວນປະຕິບັດ, ພວກເຈົ້າຕ້ອງເພີ່ມຄວາມສາມາດຂອງພວກເຈົ້າ ແລະ ຝຶກຝົນຕົນເອງດ້ວຍຄວາມຈິງໃຫ້ພຽງພໍ. ນີ້ບໍ່ແມ່ນພາລະກິດໜຶ່ງມື້ ຫຼື ສອງມື້ ແລະ ມັນບໍ່ໄດ້ງ່າຍຄືກັບທີ່ເຈົ້າຄິດ! ການເດີນເຂົ້າສູ່ໄລຍະສຸດທ້າຍຂອງເສັ້ນທາງແມ່ນຂຶ້ນຢູ່ກັບວ່າ ເຈົ້າມີຄວາມເຊື່ອ ແລະ ຄວາມປະສົງແບບໃດແທ້. ບາງເທື່ອເຈົ້າບໍ່ສາມາດເຫັນພຣະວິນຍານບໍລິສຸດທີ່ປະຕິບັດພາລະກິດໃນຕົວເຈົ້າ ຫຼື ບາງເທື່ອ ເຈົ້າບໍ່ສາມາດຄົ້ນພົບພາລະກິດຂອງພຣະວິນຍານບໍລິສຸດໃນຄຣິສຕະຈັກ, ແລ້ວເຈົ້າກໍຄິດລົບ ແລະ ຜິດຫວັງ ແລະເຕັມໄປດ້ວຍຄວາມໝົດຫວັງສຳລັບຫົນທາງທີ່ຢູ່ທາງໜ້າ. ໂດຍສະເພາະແລ້ວ ອະດີດນັກຮົບຍິ່ງໃຫຍ່ເຫຼົ່ານັ້ນລ້ວນແລ້ວແຕ່ໄດ້ລົ້ມລົງ. ສິ່ງເຫຼົ່ານີ້ບໍ່ແມ່ນເລື່ອງສະເທືອນໃຈສຳລັບພວກເຈົ້າບໍ? ເຈົ້າຄວນເຫັນສິ່ງເຫຼົ່ານີ້ເປັນແບບໃດ? ເຈົ້າມີຄວາມເຊື່ອ ຫຼື ບໍ່? ເຈົ້າເຂົ້າໃຈພາລະກິດແຫ່ງປັດຈຸບັນຢ່າງແທ້ຈິງຫຼື ບໍ່? ສິ່ງເຫຼົ່ານີ້ສາມາດກຳນົດໄດ້ວ່າ ເຈົ້າສາມາດຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງໄດ້ຢ່າງປະສົບຜົນສຳເລັດ ຫຼື ບໍ່.

ເປັນຫຍັງຈຶ່ງເວົ້າວ່າ ໃນປັດຈຸບັນ ພວກເຈົ້າໄດ້ຢູ່ໃນຂັ້ນຕອນສຸດທ້າຍຂອງເສັ້ນທາງ? ນັ້ນກໍຍ້ອນວ່າ ພວກເຈົ້າໄດ້ເຂົ້າໃຈທຸກສິ່ງທີ່ພວກເຈົ້າຄວນເຂົ້າໃຈ ແລະ ຍ້ອນເຮົາໄດ້ບອກພວກເຈົ້າທຸກສິ່ງທີ່ພວກເຈົ້າຄວນບັນລຸ. ເຮົາຍັງໄດ້ບອກພວກເຈົ້າກ່ຽວກັບທຸກສິ່ງທີ່ພວກເຈົ້າໄດ້ຖືກມອບໝາຍໃຫ້. ແລ້ວສິ່ງທີ່ພວກເຈົ້າກຳລັງຍ່າງໃນປັດຈຸບັນນີ້ກໍເປັນສ່ວນສຸດທ້າຍຂອງເສັ້ນທາງທີ່ເຮົານຳພາຜູ້ຄົນ. ເຮົາພຽງແຕ່ຕ້ອງການໃຫ້ພວກເຈົ້າສາມາດບັນລຸຄວາມສາມາດທີ່ຈະດຳລົງຊີວິດຢ່າງເປັນອິດສະຫຼະ, ບໍ່ວ່າເມື່ອໃດກໍຕາມ ເຈົ້າຈະມີຫົນທາງໄວ້ເດີນຕາມຢູ່ສະເໝີ, ເຈົ້າຈະເພີ່ມຄວາມສາມາດຂອງເຈົ້າຄືແຕ່ກ່ອນ, ອ່ານພຣະທຳຂອງພຣະເຈົ້າຢ່າງເປັນປົກກະຕິ ແລະ ມີຊີວິດມະນຸດທີ່ປົກກະຕິ. ໃນປັດຈຸບັນ ເຮົາກຳລັງນຳພາເຈົ້າໃຫ້ດຳລົງຊີວິດໃນລັກສະນະນີ້, ແຕ່ໃນອະນາຄົດ ເມື່ອເຮົາບໍ່ໄດ້ນຳພາເຈົ້າ, ເຈົ້າຈະຍັງສາມາດດຳລົງຊີວິດໃນລັກສະນະນີ້ໄດ້ຢູ່ບໍ? ເຈົ້າຈະສາມາດສືບຕໍ່ໄປໄດ້ບໍ? ນີ້ແມ່ນສິ່ງທີ່ເປັນປະສົບການຂອງເປໂຕ: ເມື່ອພຣະເຢຊູກຳລັງນຳພາລາວ, ລາວກໍບໍ່ມີຄວາມເຂົ້າໃຈ; ລາວບໍ່ຫ່ວງຫຍັງຄືກັບເດັກນ້ອຍ ແລະ ລາວບໍ່ຈິງຈັງກັບສິ່ງຕ່າງໆທີ່ລາວເຮັດ. ພຽງແຕ່ຫຼັງຈາກພຣະເຢຊູຈາກໄປ ລາວຈຶ່ງເລີ່ມມີຊີວິດມະນຸດທີ່ປົກກະຕິ. ຊີວິດທີ່ມີຄວາມໝາຍຂອງລາວເລີ່ມຂຶ້ນກໍ່ເມື່ອຫຼັງຈາກທີ່ພຣະເຢຊູຈາກໄປ. ເຖິງແມ່ນວ່າ ລາວມີຄວາມຮູ້ສຶກບາງຢ່າງກ່ຽວກັບຄວາມເປັນມະນຸດທີ່ປົກກະຕິ ແລະ ມີສິ່ງທີ່ຄົນປົກກະຕິຄວນມີ; ປານນັ້ນກໍ່ດີ ປະສົບການ ແລະ ການສະແຫວງຫາທີ່ແທ້ຈິງຂອງລາວບໍ່ໄດ້ເລີ່ມຕົ້ນໃໝ່ຈົນພຣະເຢຊູຈາກໄປ. ສະຖານະພາບໃນປັດຈຸບັນຂອງພວກເຈົ້າແມ່ນຫຍັງ? ໃນປັດຈຸບັນ ເຮົາກຳລັງນຳພາເຈົ້າໃນລັກສະນະນີ້ ແລະ ເຈົ້າຄິດວ່າມັນດີຫຼາຍ. ບໍ່ມີສະພາບແວດລ້ອມ ແລະ ການທົດລອງໃດໆເກີດຂຶ້ນກັບເຈົ້າ, ແຕ່ດ້ວຍວິທີນີ້ແມ່ນບໍ່ມີທາງທີ່ຈະເບິ່ງເຫັນລັກສະນະຂອງວຸດທິພາວະອັນແທ້ຈິງຂອງເຈົ້າ ຫຼື ແລະ ມີທາງເຫັນໄດ້ວ່າ ເຈົ້າເປັນຄົນທີ່ສະແຫວງຫາຄວາມຈິງແທ້ ຫຼື ບໍ່. ເຈົ້າເວົ້າດ້ວຍປາກຂອງເຈົ້າວ່າ ເຈົ້າເຂົ້າໃຈແກ່ນແທ້ຂອງເຈົ້າເອງ, ແຕ່ຄຳເວົ້າເຫຼົ່ານີ້ແມ່ນຄຳເວົ້າທີ່ວ່າງເປົ່າ. ພຽງແຕ່ໃນອະນາຄົດ ເມື່ອຄວາມຈິງປາກົດແກ່ເຈົ້າ, ເມື່ອນັ້ນຄວາມເຂົ້າໃຈຂອງເຈົ້າຈຶ່ງຈະຖືກພິສູດ. ເຖິງ

ແມ່ນວ່າ ໃນປັດຈຸບັນ ເຈົ້າມີຄວາມເຂົ້າໃຈແບບນີ້: "ຂ້ານ້ອຍເຂົ້າໃຈວ່າ ເນື້ອໜັງຂອງຂ້ານ້ອຍເອງເສື່ອມຊາມຫຼາຍ ແລະ ທາດແທ້ຂອງເນື້ອໜັງຂອງຜູ້ຄົນກໍແມ່ນເພື່ອກະບົດ ແລະ ຕໍ່ຕ້ານພຣະເຈົ້າ. ການທີ່ສາມາດໄດ້ຮັບເອົາການພິພາກສາ ແລະ ການຕີສອນຂອງພຣະເຈົ້າ ແມ່ນລ້ວນແລ້ວແຕ່ເປັນວິທີການການຍົກລະດັບມະນຸດຂຶ້ນຂອງພຣະອົງ. ໃນປັດຈຸບັນ ຂ້ານ້ອຍເຂົ້າໃຈສິ່ງນັ້ນ ແລະ ຂ້ານ້ອຍເຕັມໃຈທີ່ຈະຕອບແທນຄວາມຮັກຂອງພຣະເຈົ້າ". ແຕ່ນີ້ເປັນການເວົ້າທີ່ງ່າຍ. ຕໍ່ມາ ເມື່ອມີຄວາມລຳບາກຍາກແຄ້ນ, ການທົດລອງ ແລະ ການທົນທຸກເກີດຂຶ້ນກັບເຈົ້າ, ມັນຈະບໍ່ແມ່ນເລື່ອງງ່າຍທີ່ຈະຜ່ານຜ່າສິ່ງເຫຼົ່ານີ້ໄດ້. ພວກເຈົ້າປະຕິບັດຕາມແບບນີ້ທຸກມື້, ແຕ່ພວກເຈົ້າຍັງບໍ່ສາມາດສືບຕໍ່ກັບປະສົບການຂອງພວກເຈົ້າ. ມັນຍິ່ງຈະຮ້າຍແຮງກວ່ານັ້ນ ຖ້າເຮົາປ່ອຍພວກເຈົ້າທຸກຄົນ ແລະ ບໍ່ໃສ່ໃຈກັບພວກເຈົ້າອີກຕໍ່ໄປ; ຄົນສ່ວນໃຫຍ່ຈະລົ້ມລົງ ແລະ ກາຍເປັນເສົາເກືອ, ເປັນສັນຍາລັກແຫ່ງຄວາມອັບອາຍ. ເຫດການທັງໝົດເຫຼົ່ານີ້ລ້ວນແລ້ວແຕ່ເປັນໄປໄດ້ຢ່າງຍິ່ງ. ເຈົ້າບໍ່ເປັນຫ່ວງ ຫຼື ກັງວົນໃຈກ່ຽວກັບສິ່ງນີ້ບໍ? ເປໂຕໄດ້ຜ່ານສະພາບແວດລ້ອມແບບນັ້ນ ແລະ ຜະເຊີນກັບການທົນທຸກແບບນັ້ນ, ແຕ່ລາວກໍຍັງຍຶດໝັ້ນໄດ້. ຖ້າສະພາບແວດລ້ອມນັ້ນເກີດຂຶ້ນກັບເຈົ້າ, ເຈົ້າຈະສາມາດຍຶດໝັ້ນໄດ້ບໍ? ສິ່ງຕ່າງໆທີ່ພຣະເຢຊູກ່າວ ແລະ ພາລະກິດທີ່ພຣະອົງປະຕິບັດໃນຂະນະທີ່ພຣະອົງຢູ່ເທິງແຜ່ນດິນໂລກ ໄດ້ມອບພື້ນຖານໃຫ້ກັບເປໂຕ ແລະ ມັນແມ່ນຈາກພື້ນຖານນີ້ທີ່ເຮັດໃຫ້ລາວເດີນໃນເສັ້ນທາງຕໍ່ມາຂອງລາວ. ພວກເຈົ້າສາມາດໄປເຖິງລະດັບນັ້ນໄດ້ບໍ? ເສັ້ນທາງຕ່າງໆທີ່ເຈົ້າໄດ້ຍ່າງຜ່ານມາ ແລະ ຄວາມຈິງຕ່າງໆທີ່ເຈົ້າເຂົ້າໃຈ, ສິ່ງເຫຼົ່ານັ້ນສາມາດກາຍເປັນພື້ນຖານທີ່ຈະເຮັດໃຫ້ເຈົ້າສາມາດຍຶດໝັ້ນໃນອະນາຄົດໄດ້ບໍ? ສິ່ງເຫຼົ່ານີ້ສາມາດກາຍເປັນນິມິດທີ່ຈະເຮັດໃຫ້ເຈົ້າຍຶດໝັ້ນໃນເວລາຕໍ່ມາໄດ້ບໍ? ເຮົາຈະບອກຄວາມຈິງຕໍ່ພວກເຈົ້າ, ຄົນໜຶ່ງສາມາດເວົ້າໄດ້ວ່າ ສິ່ງທີ່ຜູ້ຄົນເຂົ້າໃຈໃນປັດຈຸບັນລ້ວນແລ້ວແຕ່ແມ່ນຫຼັກຄຳສອນ. ນີ້ກໍຍ້ອນວ່າ ພວກເຂົາບໍ່ມີປະສົບການໃນທຸກສິ່ງທີ່ພວກເຂົາເຂົ້າໃຈ. ເຫດຜົນທີ່ເຈົ້າສາມາດສືບຕໍ່ຈົນເຖິງປັດຈຸບັນກໍເນື່ອງຈາກການນຳພາຈາກແສງສະຫວ່າງໃໝ່ທັງໝົດ. ບໍ່ແມ່ນຍ້ອນວຸດທິພາວະຂອງເຈົ້າໄດ້ບັນລຸເຖິງລະດັບໃດໜຶ່ງ, ແຕ່ແມ່ນພຣະທຳຂອງເຮົາທີ່ໄດ້ນຳພາໃຫ້ເຈົ້າມາເຖິງປັດຈຸບັນນີ້; ບໍ່ແມ່ນຍ້ອນວ່າເຈົ້າມີຄວາມເຊື່ອທີ່ຍິ່ງໃຫຍ່, ແຕ່ຍ້ອນສະຕິປັນຍາແຫ່ງພຣະທຳຂອງເຮົາ ທີ່ເຮັດໃຫ້ເຈົ້າບໍ່ມີທາງເລືອກ ແຕ່ຕ້ອງປະຕິບັດຕາມພຣະທຳນັ້ນມາຈົນເຖິງປັດຈຸບັນ. ຖ້າເຮົາບໍ່ເວົ້າໃນປັດຈຸບັນ, ບໍ່ກ່າວສຽງຂອງເຮົາ, ເຈົ້າຈະບໍ່ສາມາດສືບຕໍ່ ແລະ ຈະຢຸດເຄື່ອນໄຫວໄປຂ້າງໜ້າທັນທີ. ນີ້ບໍ່ແມ່ນວຸດທິພາວະຕົວຈິງຂອງພວກເຈົ້າບໍ? ພວກເຈົ້າບໍ່ຮູ້ວ່າຈະເຂົ້າສູ່ລັກສະນະໃດ ແລະ ຈະທົດແທນສິ່ງທີ່ພວກເຈົ້າຂາດໃນລັກສະນະໃດ. ພວກເຈົ້າບໍ່ເຂົ້າໃຈເຖິງວິທີການດຳລົງຊີວິດຕາມຊີວິດມະນຸດທີ່ມີຄວາມໝາຍ, ບໍ່ເຂົ້າໃຈວິທີຕອບແທນຄວາມຮັກຂອງພຣະເຈົ້າ ຫຼື ການເປັນພະຍານໃນລັກສະນະທີ່ໜັກແໜ້ນ ແລະ ກຶກກ້ອງ. ພວກເຈົ້າບໍ່ສາມາດບັນລຸສິ່ງເຫຼົ່ານີ້ໄດ້ເລີຍ. ພວກເຈົ້າທັງຂີ້ຄ້ານ ແລະ ໂງ່ຈ້າ! ສິ່ງທີ່ພວກເຈົ້າສາມາດເຮັດໄດ້ກໍຄືເພິ່ງພາສິ່ງອື່ນ ແລະ ສິ່ງທີ່ພວກເຈົ້າເພິ່ງພາກໍແມ່ນແສງສະຫວ່າງໃໝ່ ແລະ ເປັນຜູ້ທີ່ນຳພາພວກເຈົ້າຢູ່ທາງໜ້າ. ທີ່ເຈົ້າສາມາດທົນຢູ່ຈົນເຖິງປັດຈຸບັນນີ້ ທັງໝົດແມ່ນຍ້ອນເຈົ້າອາໄສແສງສະຫວ່າງໃໝ່ ແລະ ຖ້ອຍຄຳ

ຫຼ້າສຸດໃນປັດຈຸບັນ. ພວກເຈົ້າບໍ່ໄດ້ເປັນຄືກັບເປໂຕເລີຍ ຜູ້ເຊິ່ງຊຳນານໃນການສະແຫວງຫາຄວາມຈິງ ຫຼື ຄືກັບໂຢບ ຜູ້ເຊິ່ງສາມາດນະມັດສະການພຣະເຢໂຮວາຢ່າງຊື່ສັດ ແລະ ເຊື່ອວ່າພຣະເຢໂຮວາເປັນພຣະເຈົ້າ ບໍ່ວ່າພຣະເຢໂຮວາຈະທົດສອບລາວແນວໃດກໍຕາມ ແລະ ບໍ່ວ່າພຣະອົງອວຍພອນລາວ ຫຼື ບໍ່ກໍຕາມ. ເຈົ້າສາມາດເຮັດແບບນັ້ນໄດ້ບໍ? ພວກເຈົ້າໄດ້ຖືກເອົາຊະນະແນວໃດ? ດ້ານໜຶ່ງແມ່ນການພິພາກສາ, ການຕີສອນ ແລະ ການສາບແຊ່ງ ແລະ ອີກດ້ານໜຶ່ງແມ່ນຄວາມລຶກລັບທີ່ເອົາຊະນະພວກເຈົ້າ. ພວກເຈົ້າລ້ວນແລ້ວແຕ່ເປັນຄືກັບໂຕລາ. ຖ້າສິ່ງທີ່ເຮົາກ່າວເຖິງນັ້ນຍັງບໍ່ສູງສົ່ງພໍສຳລັບພວກເຈົ້າ, ຖ້າບໍ່ມີຄວາມລຶກລັບໃດເລີຍ, ແລ້ວພວກເຈົ້າກໍບໍ່ສາມາດຖືກເອົາຊະນະໄດ້. ຖ້າເປັນບຸກຄົນທີ່ກຳລັງເທດສະໜາ ແລະ ພວກເຂົາເທດສະໜາແຕ່ສິ່ງດຽວຢູ່ຕະຫຼອດ, ກໍຈະໃຊ້ເວລາຕໍ່າກວ່າສອງປີທີ່ພວກເຈົ້າທຸກຄົນຈະແລ່ນໜີ ແລະ ພວກເຈົ້າຈະບໍ່ສາມາດສືບຕໍ່ໄປໄດ້. ພວກເຈົ້າບໍ່ຮູ້ຈັກວິທີທີ່ຈະເຂົ້າສູ່ຢ່າງເລິກເຊິ່ງ ຫຼື ພວກເຈົ້າບໍ່ເຂົ້າໃຈວິທີທີ່ຈະສະແຫວງຫາຄວາມຈິງ ຫຼື ວິຖີແຫ່ງຊີວິດ. ສິ່ງທີ່ພວກເຈົ້າເຂົ້າໃຈແມ່ນການຮັບເອົາສິ່ງທີ່ແປກໃໝ່ສຳລັບພວກເຈົ້າ ເຊັ່ນການຟັງຄວາມລຶກລັບ ຫຼື ນິມິດ ຫຼື ຟັງວິທີທີ່ພຣະເຈົ້າເຄີຍປະຕິບັດພາລະກິດ ຫຼື ຟັງປະສົບການຂອງເປໂຕ ຫຼື ເບື້ອງຫຼັງຂອງການຄຶງພຣະເຢຊູທີ່ໄມ້ກາງແຂນ... ພວກເຈົ້າເຕັມໃຈແຕ່ຈະຟັງສິ່ງເຫຼົ່ານີ້ ແລະ ຍິ່ງພວກເຈົ້າຟັງຫຼາຍສໍ່າໃດພວກເຈົ້າກໍມີກຳລັງຫຼາຍຂຶ້ນສໍ່ານັ້ນ. ພວກເຈົ້າພຽງແຕ່ຟັງທຸກສິ່ງເຫຼົ່ານີ້ເພື່ອປັດເປົ່າຄວາມໂສກເສົ້າ ແລະ ຄວາມເບື່ອໜ່າຍຂອງພວກເຈົ້າ! ຊີວິດຂອງພວກເຈົ້າຢູ່ໄດ້ທັງໝົດກໍຍ້ອນນະວະນິຍາຍເຫຼົ່ານີ້. ເຈົ້າຄິດວ່າ ເຈົ້າຢູ່ໄດ້ມາເຖິງປັດຈຸບັນຍ້ອນຄວາມເຊື່ອຂອງເຈົ້າເອງບໍ? ນີ້ບໍ່ແມ່ນວຸດທິພາວະທີ່ຕໍ່າຊ້າ ແລະ ເປັນຕາສົມເພດທີ່ພວກເຈົ້າມີຢູ່ບໍ? ຄວາມຊື່ສັດຂອງພວກເຈົ້າຢູ່ໃສ? ຄວາມເປັນມະນຸດຂອງພວກເຈົ້າຢູ່ໃສ? ພວກເຈົ້າມີຊີວິດຂອງມະນຸດບໍ? ມີອົງປະກອບຈັກຢ່າງທີ່ພວກເຈົ້າມີເພື່ອຖືກເຮັດໃຫ້ສົມບູນແບບ? ສິ່ງທີ່ເຮົາກຳລັງເວົ້າບໍ່ແມ່ນຄວາມຈິງບໍ? ເຮົາກ່າວ ແລະ ປະຕິບັດພາລະກິດແບບນີ້ແຕ່ພວກເຈົ້າຍັງບໍ່ຢາກໃສ່ໃຈເລີຍ. ໃນຂະນະທີ່ພວກເຈົ້າຕິດຕາມ, ພວກເຈົ້າກໍເບິ່ງເຊັ່ນກັນ. ພວກເຈົ້າມີທ່າທາງແບບເມີນເສີຍຢູ່ສະເໝີ ແລະ ພວກເຈົ້າຖືກຈູງດັງຢູ່ຕະຫຼອດ. ນີ້ແມ່ນວິທີທາງທີ່ພວກເຈົ້າທຸກຄົນສືບຕໍ່ຕະຫຼອດມາ. ມັນເປັນການຕີສອນ, ການຫຼໍ່ຫຼອມ ແລະ ການລົງໂທດໂດຍສິ້ນເຊີງທີ່ໄດ້ນຳພາພວກເຈົ້າມາເຖິງປັດຈຸບັນ. ຖ້າມີແຕ່ການເທດສະໜາບາງຢ່າງກ່ຽວກັບການເຂົ້າສູ່ຊີວິດ, ພວກເຈົ້າທຸກຄົນຈະບໍ່ໜີອອກໄປຕັ້ງແຕ່ດົນແລ້ວບໍ? ຄວາມອວດດີຂອງພວກເຈົ້າແຕ່ລະຄົນແມ່ນຮ້າຍແຮງຂຶ້ນກວ່າເກົ່າ; ແຕ່ໃນຄວາມເປັນຈິງແລ້ວ ທ້ອງຂອງພວກເຈົ້າບໍ່ໄດ້ມີຫຍັງເລີຍ ນອກຈາກນໍ້າທີ່ສົກກະປົກ! ທີ່ເຈົ້າສາມາດຄົງຢູ່ຈົນຮອດປັດຈຸບັນກໍ່ຍ້ອນວ່າເຈົ້າໄດ້ເຂົ້າໃຈຄວາມລຶກລັບບາງຢ່າງ ແລະ ເຈົ້າເຂົ້າໃຈບາງສິ່ງທີ່ມະນຸດບໍ່ເຂົ້າໃຈມາກ່ອນ ພວກເຈົ້າບໍ່ມີເຫດຜົນທີ່ຈະບໍ່ຕິດຕາມ, ສະນັ້ນ ພວກເຈົ້າຈຶ່ງພຽງແຕ່ຝືນໃຈ ແລະ ຕິດຕາມໄປຕາມກະແສ. ນີ້ແມ່ນຜົນທີ່ຖືກບັນລຸດ້ວຍພຣະທຳຂອງເຮົາ, ແຕ່ມັນບໍ່ແມ່ນຄວາມສຳເລັດຂອງພວກເຈົ້າເອງຢ່າງແນ່ນອນ. ພວກເຈົ້າບໍ່ມີຫຍັງໃຫ້ໂອ້ອວດ. ສະນັ້ນ ໃນພາລະກິດຂັ້ນຕອນນີ້ ພວກເຈົ້າຖືກນຳພາມາຈົນເຖິງປັດຈຸບັນ ສ່ວນໃຫຍ່ ກໍຜ່ານທາງພຣະທຳ. ບໍ່ດັ່ງນັ້ນ ແມ່ນໃຜທ່າມກາງພວກເຈົ້າທີ່ຈະສາມາດເຊື່ອຟັງໄດ້? ແມ່ນໃຜທີ່ຈະສາມາດຢູ່ລອດມາເຖິງປັດຈຸບັນໄດ້?

ຕັ້ງແຕ່ຕົ້ນມາ ພວກເຈົ້າຕ້ອງການໜີຢູ່ຕະຫຼອດເວລາ, ແຕ່ພວກເຈົ້າບໍ່ກ້າ; ພວກເຈົ້າບໍ່ມີຄວາມກ້າຫານ. ຈົນເຖິງປັດຈຸບັນນີ້, ພວກເຈົ້າກໍຍັງຕິດຕາມໂດຍບໍ່ເຕັມໃຈ.

ພຽງແຕ່ຫຼັງຈາກທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນ ແລະ ຈາກໄປ, ເປໂຕຈຶ່ງເລີ່ມໄປຕາມວິທີທາງຂອງລາວເອງ ແລະ ເລີ່ມຍ່າງໃນເສັ້ນທາງທີ່ລາວຄວນຍ່າງ; ລາວເລີ່ມຕົ້ນຝຶກຝົນຕົນເອງຫຼັງຈາກທີ່ລາວເຫັນຄວາມບໍ່ພຽງພໍ ແລະ ຂໍ້ບົກຜ່ອງຂອງລາວເອງ. ລາວເຫັນວ່າ ລາວມີຄວາມຮັກພຽງແຕ່ເລັກນ້ອຍສຳລັບພຣະເຈົ້າ ແລະ ຄວາມປະສົງທີ່ຈະທົນທຸກກໍບໍ່ພຽງພໍ, ລາວບໍ່ມີຄວາມເຂົ້າໃຈໃດໆເລີຍ ແລະ ເຫດຜົນຂອງລາວກໍຂາດເຂີນ. ລາວເຫັນວ່າ ມີຫຼາຍສິ່ງໃນຕົວລາວທີ່ບໍ່ສອດຄ່ອງກັບຄວາມປະສົງຂອງພຣະເຢຊູ ແລະ ມີຫຼາຍສິ່ງທີ່ເປັນການກະບົດ ແລະ ຕໍ່ຕ້ານ ແລະ ຫຼາຍສິ່ງທີ່ປະປົນກັບຄວາມຕ້ອງການຂອງມະນຸດ. ດ້ວຍເຫດດັ່ງກ່າວ ລາວຈຶ່ງໄດ້ເຂົ້າສູ່ແຕ່ລະດ້ານ. ເມື່ອພຣະເຢຊູນຳພາລາວ, ພຣະອົງເປີດເຜີຍສະພາບຂອງລາວ ແລະ ເປໂຕກໍຍອມຮັບມັນ ແລະ ເຫັນດ້ວຍຢ່າງເຕັມໃຈ, ແຕ່ລາວບໍ່ມີຄວາມເຂົ້າໃຈຢ່າງແທ້ຈິງ ຈົນກວ່າເວລາຕໍ່ມາ. ນັ້ນກໍຍ້ອນວ່າ ໃນເວລານັ້ນ ລາວຍັງບໍ່ມີປະສົບການຫຍັງເທື່ອ ແລະ ລາວບໍ່ຮູ້ຈັກວຸດທິພາວະຂອງລາວເລີຍ. ໝາຍຄວາມວ່າ ເຮົາກຳລັງໃຊ້ພຣະທຳເທົ່ານັ້ນເພື່ອນຳພາພວກເຈົ້າ ແລະ ມັນເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພວກເຈົ້າສົມບູນພາຍໃນໄລຍະເວລາສັ້ນໆແລ້ວ ພວກເຈົ້າຈະສາມາດເຂົ້າໃຈ ແລະ ຮູ້ຈັກຄວາມຈິງໄດ້ເລີຍ. ນີ້ກໍຍ້ອນວ່າ ການເອົາຊະນະເຈົ້າ ແລະ ການເຮັດໃຫ້ເຈົ້າເຊື່ອໃນຫົວໃຈຂອງເຈົ້າແມ່ນພາລະກິດໃນປັດຈຸບັນ ແລະ ພຽງແຕ່ຫຼັງຈາກທີ່ຜູ້ຄົນຖືກເອົາຊະນະ ພວກເຂົາບາງຄົນຈຶ່ງຈະຖືກເຮັດໃຫ້ສົມບູນ. ໃນຕອນນີ້ ນິມິດເຫຼົ່ານັ້ນ ແລະ ຄວາມຈິງເຫຼົ່ານັ້ນທີ່ເຈົ້າເຂົ້າໃຈແມ່ນກຳລັງສ້າງພື້ນຖານໃຫ້ກັບປະສົບການໃນອະນາຄົດຂອງເຈົ້າ; ເມື່ອພົບກັບຄວາມຍາກລຳບາກໃນອະນາຄົດ ພວກເຈົ້າກໍລ້ວນແລ້ວແຕ່ຈະມີປະສົບການຕົວຈິງກ່ຽວກັບພຣະທຳເຫຼົ່ານີ້. ຫຼັງຈາກນັ້ນ ເມື່ອການທົດລອງເກີດຂຶ້ນກັບເຈົ້າ ແລະ ເຈົ້າຜ່ານຄວາມຍາກລຳບາກ, ເຈົ້າກໍຈະຄິດເຖິງຄຳເວົ້າທີ່ເຈົ້າເວົ້າໃນມື້ນີ້ວ່າ: ບໍ່ວ່າຂ້ານ້ອຍຈະຜະເຊີນກັບຄວາມຍາກລຳບາກ, ກັບການທົດລອງ ຫຼື ໄພພິບັດທີ່ຍິ່ງໃຫຍ່ແບບໃດກໍຕາມ, ຂ້ານ້ອຍຕ້ອງເຮັດໃຫ້ພຣະເຈົ້າພໍໃຈ. ໃຫ້ຄິດເຖິງປະສົບການຂອງເປໂຕ ແລະ ຄິດເຖິງປະສົບການຂອງໂຢບ, ເຈົ້າຈະຖືກບັນດານໃຈດ້ວຍຄຳເວົ້າໃນມື້ນີ້. ພຽງແຕ່ໃນວິທີນີ້ເທົ່ານັ້ນ ຄວາມເຊື່ອຂອງເຈົ້າຈຶ່ງຈະໄດ້ຮັບການດົນໃຈ. ໃນເວລານັ້ນ, ເປໂຕເວົ້າວ່າ ລາວບໍ່ສົມຄວນທີ່ຈະໄດ້ຮັບເອົາການພິພາກສາ ແລະ ການຕີສອນຂອງພຣະອົງ ແລະ ມີແຕ່ເມື່ອນັ້ນເຈົ້າຈຶ່ງຈະເຕັມໃຈທີ່ຈະເຮັດໃຫ້ທຸກຄົນເຫັນເຖິງອຸປະນິໄສທີ່ຊອບທຳຂອງພຣະເຈົ້າຜ່ານເຈົ້າ. ເຈົ້າຈະພ້ອມເຕັມໃຈຍອມຮັບເອົາການພິພາກສາ ແລະ ການຕີສອນຂອງພຣະອົງ ແລະ ການພິພາກສາ, ການຕີສອນ ແລະ ການສາບແຊ່ງຂອງພຣະອົງຈະເປັນຄວາມສຸກສະບາຍໃຫ້ກັບເຈົ້າ. ໃນປັດຈຸບັນ, ມັນຮັບບໍ່ໄດ້ແທ້ໆທີ່ເຈົ້າບໍ່ໄດ້ປະກອບດ້ວຍຄວາມຈິງ. ຖ້າບໍ່ມີມັນ, ບໍ່ແມ່ນແຕ່ເຈົ້າຈະບໍ່ສາມາດຍຶດໝັ້ນໃນອະນາຄົດໄດ້, ແຕ່ເຈົ້າອາດຈະບໍ່ສາມາດຜ່ານພາລະກິດໃນປັດຈຸບັນນີ້ໄປໄດ້. ດ້ວຍວິທີນີ້, ເຈົ້າຈະບໍ່ເປັນເປົ້າໝາຍແຫ່ງການກຳຈັດ ແລະ ການລົງໂທດບໍ? ໃນຕອນນີ້, ບໍ່ມີຄວາມຈິງໃດເລີຍໃນຕົວເຈົ້າ ແລະ ເຮົາໄດ້ສະໜອງໃຫ້ກັບເຈົ້າໃນແຕ່ລະດ້ານທີ່ເຈົ້າຂາດເຂີນ; ເຮົາກ່າວຈາກທຸກດ້ານ. ເຈົ້າບໍ່ໄດ້

ອົດທົນຕໍ່ການທົນທຸກຢ່າງແທ້ຈິງ; ເຈົ້າພຽງແຕ່ຮັບເອົາສິ່ງທີ່ມີຢູ່ແລ້ວ, ເຈົ້າບໍ່ໄດ້ຈ່າຍລາຄາໃດເລີຍ ແລະ ຍິ່ງໄປກວ່ານັ້ນ ເຈົ້າບໍ່ມີປະສົບການ ແລະ ຄວາມເຂົ້າໃຈທີ່ແທ້ຈິງຂອງເຈົ້າເອງ. ສະນັ້ນ ສິ່ງທີ່ເຈົ້າເຂົ້າໃຈບໍ່ແມ່ນວຸດທິພາວະທີ່ແທ້ຈິງຂອງເຈົ້າ. ເຈົ້າຈຳກັດສະເພາະແຕ່ຄວາມເຂົ້າໃຈ, ຄວາມຮູ້ ແລະ ການເຫັນເທົ່ານັ້ນ, ແຕ່ເຈົ້າບໍ່ໄດ້ເກັບກ່ຽວຜົດຜົນສ່ວນຫຼາຍ. ຖ້າເຮົາບໍ່ເຄີຍໃສ່ໃຈເຈົ້າຈັກເທື່ອ ແຕ່ປ່ອຍໃຫ້ເຈົ້າຜ່ານປະສົບການໃນເຮືອນຂອງເຈົ້າເອງ, ເຈົ້າກໍ່ຄົງຈະຫຼົບໜີເຂົ້າໄປສູ່ໂລກທີ່ກວ້າງໃຫຍ່ແຕ່ດົນນານແລ້ວ. ຫົນທາງທີ່ເຈົ້າຍ່າງໃນອະນາຄົດຈະເປັນວິທີທາງແຫ່ງການທົນທຸກ ແລະ ຖ້າເຈົ້າຍ່າງໃນໄລຍະປັດຈຸບັນຂອງເສັ້ນທາງເປັນຢ່າງດີ ແລະ ເມື່ອເຈົ້າຜ່ານຄວາມຍາກລຳບາກທີ່ໜັກກວ່າເກົ່າໃນອະນາຄົດ, ເຈົ້າກໍຈະມີຄຳພະຍານ. ຖ້າເຈົ້າເຂົ້າໃຈຄວາມໝາຍຂອງຊີວິດມະນຸດ ແລະ ໄດ້ເດີນຕາມເສັ້ນທາງທີ່ຖືກຕ້ອງຂອງຊີວິດມະນຸດ ແລະ ຖ້າໃນອະນາຄົດ ບໍ່ວ່າພຣະເຈົ້າຈະປະຕິບັດຕໍ່ເຈົ້າແນວໃດກໍຕາມ, ເຈົ້າກໍຈະຍອມຢູ່ພາຍໃຕ້ແຜນການຂອງພຣະອົງ ໂດຍບໍ່ມີການຕໍ່ວ່າ ຫຼື ທາງເລືອກອື່ນໃດ ແລະ ເຈົ້າຈະບໍ່ມີເງື່ອນໄຂໃດໆສຳລັບພຣະເຈົ້າ, ໃນວິທີນີ້ ເຈົ້າຈຶ່ງຈະເປັນບຸກຄົນທີ່ມີຄຸນຄ່າ. ໃນປັດຈຸບັນ, ເຈົ້າບໍ່ໄດ້ຜະເຊີນກັບຄວາມຍາກລຳບາກ, ສະນັ້ນ ເຈົ້າຈຶ່ງສາມາດເຊື່ອຟັງທຸກສິ່ງ. ເຈົ້າເວົ້າວ່າ ບໍ່ວ່າພຣະເຈົ້າຈະນຳພາດ້ວຍວິທີໃດກໍຕາມ ເຈົ້າຈະຍອມຢູ່ພາຍໃຕ້ແຜນການທັງໝົດຂອງພຣະອົງ. ບໍ່ວ່າພຣະເຈົ້າຈະຕີສອນ ຫຼື ສາບແຊ່ງເຈົ້າ, ເຈົ້າກໍເຕັມໃຈທີ່ຈະເຮັດໃຫ້ພຣະອົງພໍໃຈ. ການເວົ້າແບບນັ້ນ ແລະ ສິ່ງທີ່ເຈົ້າເວົ້າໃນຕອນນີ້ບໍ່ໄດ້ໝາຍຄວາມວ່າ ມັນສະແດງເຖິງວຸດທິພາວະຂອງເຈົ້າ. ສິ່ງທີ່ເຈົ້າເຕັມໃຈທີ່ຈະເຮັດໃນຕອນນີ້ບໍ່ໄດ້ສະແດງໃຫ້ເຫັນວ່າ ເຈົ້າສາມາດຕິດຕາມຈົນເຖິງເວລາສຸດທ້າຍ. ເມື່ອຄວາມຍາກລຳບາກເກີດຂຶ້ນກັບເຈົ້າ ຫຼື ເມື່ອເຈົ້າຜະເຊີນກັບການຂົ່ມເຫັງ ຫຼື ການຂູ່ເຂັນ ຫຼື ການທົດລອງທີ່ຍິ່ງໃຫຍ່, ເຈົ້າຈະບໍ່ສາມາດກ່າວຄຳເວົ້າເຫຼົ່ານັ້ນໄດ້. ຖ້າເຈົ້າສາມາດມີຄວາມເຂົ້າໃຈແບບນັ້ນໄດ້ໃນຕອນນັ້ນ ແລະ ເຈົ້າຍຶດໝັ້ນ, ສິ່ງນີ້ເທົ່ານັ້ນທີ່ເປັນວຸດທິພາວະຂອງເຈົ້າ. ເປໂຕເປັນແບບໃດໃນເວລານັ້ນ? ລາວເວົ້າວ່າ "ພຣະຜູ້ເປັນເຈົ້າ, ຂ້ານ້ອຍຈະເສຍສະຫຼະຊີວິດຂອງຂ້ານ້ອຍເພື່ອພຣະອົງ. ຖ້າພຣະອົງຈະໃຫ້ຂ້ານ້ອຍຕາຍ, ຂ້ານ້ອຍກໍຈະຕາຍ!" ນັ້ນແມ່ນວິທີທີ່ລາວອະທິຖານໃນເວລານັ້ນເຊັ່ນກັນ ແລະ ລາວຍັງເວົ້າວ່າ "ເຖິງແມ່ນຄົນອື່ນບໍ່ຮັກພຣະອົງ, ຂ້ານ້ອຍຕ້ອງຮັກພຣະອົງຈົນເຖິງເວລາສຸດທ້າຍ. ຂ້ານ້ອຍຈະຕິດຕາມພຣະອົງຢູ່ທຸກເວລາ". ນັ້ນແມ່ນສິ່ງທີ່ລາວເວົ້າໃນເວລານັ້ນ, ແຕ່ທັນທີທີ່ການທົດລອງເກີດຂຶ້ນກັບລາວ, ລາວກໍແຕກສະຫຼາຍ ແລະ ຮ້ອງໄຫ້. ພວກເຈົ້າທຸກຄົນຮູ້ຈັກວ່າ ເປໂຕປະຕິເສດພຣະຜູ້ເປັນເຈົ້າສາມຄັ້ງ ແມ່ນບໍ? ມີຫຼາຍຄົນທີ່ຈະຮ້ອງໄຫ້ ແລະ ສະແດງຄວາມອ່ອນແອຂອງມະນຸດ ເມື່ອການທົດລອງເກີດຂຶ້ນກັບພວກເຂົາ. ເຈົ້າບໍ່ແມ່ນເຈົ້ານາຍຂອງຕົນເອງ. ໃນນີ້, ເຈົ້າບໍ່ສາມາດຄວບຄຸມຕົນເອງ. ບາງເທື່ອ ມື້ນີ້ ເຈົ້າເຮັດໄດ້ດີທີ່ສຸດ, ແຕ່ນັ້ນກໍເພາະເຈົ້າມີສະພາບແວດລ້ອມທີ່ເໝາະສົມ. ຖ້າຕ້ອງມີການປ່ຽນແປງໃນມື້ຕໍ່ມາ, ເຈົ້າຈະສະແດງຄວາມຢ້ານກົວ ແລະ ການຂາດຄວາມສາມາດ ແລະ ເຈົ້າຍັງຈະສະແດງຄວາມຊື່ອຊ້າ ແລະ ຄວາມໄຮ້ຄ່າຂອງເຈົ້າອີກດ້ວຍ. "ຄວາມເປັນຜູ້ຊາຍ" ຂອງເຈົ້າແມ່ນຕົກລົງສູ່ຮ່ອງນໍ້າໄປດົນນານແລ້ວ ແລະ ບາງເທື່ອ ເຈົ້າເຖິງກັບຍອມຈຳນົນ ແລະ ຍ່າງໜີ. ນີ້ສະແດງໃຫ້ເຫັນວ່າ ສິ່ງທີ່ເຈົ້າເຂົ້າໃຈໃນເວລານັ້ນບໍ່ແມ່ນວຸດທິ

ພາວະຕົວຈິງຂອງເຈົ້າ. ຄົນໃດໜຶ່ງຕ້ອງເບິ່ງວຸດທິພາວະຕົວຈິງຂອງຄົນເພື່ອເບິ່ງວ່າ ພວກເຂົາຮັກພຣະເຈົ້າແທ້ຈິງ ຫຼື ບໍ່, ພວກເຂົາສາມາດຍອມຢູ່ພາຍໃຕ້ແຜນການຂອງພຣະເຈົ້າແທ້ຈິງ ຫຼື ບໍ່ ແລະ ພວກເຂົາສາມາດໃຊ້ກຳລັງທັງໝົດຂອງພວກເຂົາເພື່ອບັນລຸສິ່ງທີ່ພຣະເຈົ້າຕ້ອງການ ແລະ ຍັງຄົງອຸທິດໃຫ້ກັບພຣະເຈົ້າ ແລະ ມອບສິ່ງທີ່ດີທີ່ສຸດໃຫ້ກັບພຣະເຈົ້າ ຫຼື ບໍ່, ເຖິງແມ່ນວ່າ ໝາຍເຖິງ ພວກເຂົາຕ້ອງເສຍສະຫຼະຊີວິດຂອງພວກເຂົາເອງ.

ພວກເຈົ້າຕ້ອງຈື່ວ່າ ໃນຕອນນີ້ ພຣະທຳເຫຼົ່ານີ້ຖືກກ່າວອອກມາແລ້ວ ຄື ຫຼັງຈາກນີ້ ເຈົ້າຈະຜະເຊີນກັບຄວາມຍາກລຳບາກທີ່ຍິ່ງໃຫຍ່ກວ່າເກົ່າ ແລະ ການທົນທຸກທີ່ໜັກກວ່າເກົ່າ! ການທີ່ຈະຖືກເຮັດໃຫ້ສົມບູນບໍ່ແມ່ນສິ່ງທີ່ງ່າຍ ຫຼື ທຳມະດາ. ຢ່າງໜ້ອຍທີ່ສຸດ ເຈົ້າຕ້ອງມີຄວາມເຊື່ອຂອງໂຢບ ຫຼື ບາງເທື່ອ ເຊື່ອຫຼາຍກວ່າລາວອີກ. ເຈົ້າຄວນຮູ້ຈັກວ່າ ການທົດລອງໃນອະນາຄົດຈະໃຫຍ່ກວ່າການທົດລອງຂອງໂຢບ ແລະ ເຈົ້າຍັງຕ້ອງຜະເຊີນກັບການຕີສອນໃນໄລຍະເວລາຍາວ. ສິ່ງນີ້ເປັນສິ່ງທີ່ງ່າຍບໍ? ຖ້າຄວາມສາມາດຂອງເຈົ້າບໍ່ສາມາດໄດ້ຮັບການປັບປຸງ, ແລ້ວຄວາມສາມາດໃນການເຂົ້າໃຈຂອງເຈົ້າກໍຈະຂາດເຂີນ ແລະ ເຈົ້າຈະມີຄວາມຮູ້ໜ້ອຍເກີນໄປ, ແລ້ວໃນເວລານັ້ນ ເຈົ້າກໍຈະບໍ່ມີຄຳພະຍານໃດໆເລີຍ, ເຈົ້າຈະກາຍເປັນຕົວຕະຫຼົກ ແລະ ເປັນເຄື່ອງຫຼິ້ນໃຫ້ກັບຊາຕານ. ຖ້າເຈົ້າບໍ່ສາມາດຖືເອົານິມິດໃນຕອນນີ້, ແລ້ວເຈົ້າກໍຈະບໍ່ມີພື້ນຖານຫຍັງເລີຍ ແລະ ເຈົ້າຈະຖືກໂຍນຖິ້ມໃນອະນາຄົດ! ທຸກສ່ວນຂອງເສັ້ນທາງບໍ່ແມ່ນຈະຍ່າງໄດ້ແບບງ່າຍດາຍ, ດັ່ງນັ້ນ ຢ່າຖືເບົາກັບສິ່ງນີ້. ໃນຕອນນີ້ ໃຫ້ໄຕ່ຕອງເຖິງສິ່ງນີ້ຢ່າງລະມັດລະວັງ ແລະ ຈັດກຽມວິທີເພື່ອຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງຢ່າງຖືກຕ້ອງ. ນີ້ແມ່ນເສັ້ນທາງທີ່ຕ້ອງເດີນຕາມໃນອະນາຄົດ ແລະ ທຸກຄົນກໍຕ້ອງເດີນຕາມມັນ. ເຈົ້າບໍ່ສາມາດປ່ອຍໃຫ້ຄວາມເຂົ້າໃຈໃນປັດຈຸບັນນີ້ເຂົ້າຫູຊ້າຍອອກຫູຂວາ ແລະ ຢ່າຄິດວ່າສິ່ງທີ່ເຮົາເວົ້າຕໍ່ເຈົ້າລ້ວນແລ້ວແຕ່ເປັນການເສຍລົມຫາຍໃຈລ້າໆ. ມື້ນັ້ນຈະມາເຖິງ ມື້ທີ່ເຈົ້ານຳໃຊ້ທຸກສິ່ງໃຫ້ເກີດຜົນປະໂຫຍດ; ພຣະທຳຈະບໍ່ຖືກກ່າວໂດຍສູນເປົ່າ. ນີ້ແມ່ນເວລາທີ່ເຈົ້າຕ້ອງຕຽມພ້ອມ; ມັນແມ່ນເວລາທີ່ຈະປູທາງສຳລັບອະນາຄົດ. ເຈົ້າຄວນຈັດກຽມເສັ້ນທາງທີ່ເຈົ້າຄວນຍ່າງໃນອະນາຄົດ; ເຈົ້າຄວນເປັນຫ່ວງ ແລະ ກັງວົນກ່ຽວກັບວິທີທີ່ເຈົ້າຈະສາມາດຍຶດໝັ້ນໃນເບື້ອງໜ້າ ແລະ ກຽມສຳລັບເສັ້ນທາງໃນອະນາຄົດຂອງເຈົ້າເປັນຢ່າງດີ. ຢ່າໂລພາ ແລະ ຂີ້ຄ້ານ! ເຈົ້າຕ້ອງເຮັດທຸກສິ່ງທີ່ເຈົ້າສາມາດເຮັດໄດ້ເພື່ອໃຊ້ເວລາຂອງເຈົ້າໃຫ້ເກີດປະໂຫຍດສູງສຸດໃນການຮັບເອົາທຸກສິ່ງທີ່ເຈົ້າຕ້ອງການ. ເຮົາກຳລັງມອບທຸກສິ່ງໃຫ້ກັບເຈົ້າເພື່ອເຈົ້າຈະສາມາດເຂົ້າໃຈໄດ້. ພວກເຈົ້າໄດ້ເຫັນດ້ວຍຕາຂອງພວກເຈົ້າເອງແລ້ວວ່າ ພາຍໃນເວລາໜ້ອຍກວ່າສາມປີ, ເຮົາໄດ້ເວົ້າຫຼາຍສິ່ງຢ່າງ ແລະ ປະຕິບັດພາລະກິດຫຼາຍຢ່າງ. ໜຶ່ງເຫດຜົນທີ່ເຮົາປະຕິບັດພາລະກິດແບບນີ້ກໍຍ້ອນຜູ້ຄົນຂາດເຂີນຫຼາຍ ແລະ ອີກເຫດຜົນໜຶ່ງກໍຍ້ອນເວລາສັ້ນເກີນໄປ ແລະ ບໍ່ສາມາດຊັກຊ້າອີກຕໍ່ໄປ. ເຈົ້າຈິນຕະນາການວ່າ ຜູ້ຄົນຕ້ອງບັນລຸຄວາມເຂົ້າໃຈພາຍໃນໂດຍສົມບູນ ກ່ອນທີ່ພວກເຂົາຈະສາມາດເປັນພະຍານ ແລະ ຖືກໃຊ້ໃຫ້ເປັນປະໂຫຍດໄດ້, ແບບນັ້ນບໍ່ຊ້າເກີນໄປບໍ? ແລ້ວເຮົາຕ້ອງຕິດຕາມເຈົ້າອີກດົນສໍ່າໃດ? ຖ້າເຈົ້າຈະໃຫ້ເຮົາຕິດຕາມເຈົ້າຈົນເຮົາແກ່ເຖົ້າ, ມັນເປັນໄປບໍ່ໄດ້! ໂດຍຜ່ານຄວາມຍາກລຳບາກທີ່ຍິ່ງໃຫຍ່ກວ່າເກົ່າ, ຄວາມ

ເຂົ້າໃຈທີ່ແທ້ຈິງພາຍໃນທຸກຄົນຈຶ່ງຈະຖືກບັນລຸ. ສິ່ງເຫຼົ່ານີ້ແມ່ນບາດກ້າວຂອງພາລະກິດ. ຫຼັງຈາກທີ່ເຈົ້າເຂົ້າໃຈນິມິດທີ່ສົນທະນາກັນໃນປັດຈຸບັນຢ່າງສົມບູນ ແລະ ເຈົ້າບັນລຸວຸດທິພາວະທີ່ແທ້ຈິງ, ບໍ່ວ່າເຈົ້າຈະພະເຊີນກັບຄວາມລຳບາກແບບໃດກໍຕາມໃນອະນາຄົດ ສິ່ງນັ້ນກໍຈະເອົາຊະນະເຈົ້າບໍ່ໄດ້, ເຈົ້າຈະສາມາດຕ້ານທານກັບສິ່ງເຫຼົ່ານັ້ນໄດ້. ເມື່ອເຮົາໄດ້ສຳເລັດພາລະກິດໃນບາດກ້າວສຸດທ້າຍນີ້ ແລະ ເຮົາສຳເລັດໃນການກ່າວພຣະທຳສຸດທ້າຍ, ໃນອະນາຄົດ ຜູ້ຄົນຈະຕ້ອງຍ່າງໃນເສັ້ນທາງຂອງພວກເຂົາເອງ. ສິ່ງນີ້ຈະສຳເລັດຕາມພຣະທຳທີ່ກ່າວໄວ້ກ່ອນໜ້ານີ້: ພຣະວິນຍານບໍລິສຸດໄດ້ມອບໝາຍໜ້າທີ່ໃຫ້ກັບທຸກຄົນ ແລະ ພາລະກິດທີ່ຕ້ອງປະຕິບັດໃຫ້ກັບທຸກຄົນ. ໃນອະນາຄົດ, ທຸກຄົນຈະຍ່າງຕາມເສັ້ນທາງທີ່ພວກເຂົາຄວນຍ່າງ ເຊິ່ງນຳພາໂດຍພຣະວິນຍານບໍລິສຸດ. ແມ່ນໃຜຈະສາມາດໃສ່ໃຈຄົນອື່ນເມື່ອຜ່ານຄວາມຍາກລຳບາກ? ແຕ່ລະຄົນມີການທົນທຸກຂອງພວກເຂົາເອງ ແລະ ແຕ່ລະຄົນມີວຸດທິພາວະຂອງພວກເຂົາເອງ. ບໍ່ມີໃຜມີວຸດທິພາວະຄືກັນ. ສາມີຈະບໍ່ດູແລພັນລະຍາຂອງພວກເຂົາ ແລະ ພໍ່ແມ່ຈະບໍ່ດູແລລູກຂອງພວກເຂົາ; ບໍ່ມີໃຜທີ່ສາມາດດູແລຄົນອື່ນໄດ້. ມັນບໍ່ຄືກັບຕອນນີ້, ການດູແລ ແລະ ການສະໜັບສະໜູນຮ່ວມກັນແມ່ນຍັງເປັນໄປໄດ້ຢູ່. ນັ້ນຈະເປັນເວລາແຫ່ງການເປີດໂປງຂອງຄົນທຸກປະເພດ. ນັ້ນກໍຄື ເມື່ອພຣະເຈົ້າຂ້ຽນຕີຄົນລ້ຽງແກະ, ຝູງແກະກໍຈະແຕກກະຈັກກະຈາຍ ແລະ ໃນເວລານັ້ນ ພວກເຈົ້າຈະບໍ່ມີຜູ້ນຳທີ່ແທ້ຈິງເລີຍ. ຜູ້ຄົນຈະຖືກແບ່ງອອກ ເຊິ່ງຈະບໍ່ເປັນຄືກັບປັດຈຸບັນ ທີ່ພວກເຈົ້າສາມາດມາເຕົ້າໂຮມຢູ່ຮ່ວມກັນ. ຫຼັງຈາກນັ້ນ, ຄົນທີ່ບໍ່ມີພາລະກິດຂອງພຣະວິນຍານບໍລິສຸດຈະສະແດງທາດແທ້ຂອງພວກເຂົາເອງ. ສາມີຈະຂາຍພັນລະຍາຂອງພວກເຂົາ, ພັນລະຍາຈະຂາຍສາມີຂອງພວກເຂົາ, ລູກໆຈະຂາຍພໍ່ແມ່ຂອງພວກເຂົາ, ພໍ່ແມ່ຈະຂົ່ມເຫັງລູກໆຂອງພວກເຂົາ, ຫົວໃຈຂອງມະນຸດບໍ່ສາມາດທຳນາຍໄດ້! ສິ່ງທີ່ສາມາດເຮັດໄດ້ແມ່ນໃຫ້ຄົນໜຶ່ງຍຶດຕິດກັບສິ່ງທີ່ຄົນໜຶ່ງມີ ແລະ ຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງເປັນຢ່າງດີ. ໃນຕອນນີ້ ພວກເຈົ້າບໍ່ເຫັນສິ່ງນີ້ຢ່າງຊັດເຈນ ແລະ ພວກເຈົ້າກໍລ້ວນແລ້ວແຕ່ສາຍຕາສັ້ນ. ການຜ່ານພາລະກິດບາດກ້າວນີ້ຢ່າງປະສົບຜົນສຳເລັດບໍ່ແມ່ນສິ່ງທີ່ງ່າຍເລີຍ.

ເວລາແຫ່ງຄວາມຍາກລຳບາກຈະບໍ່ຍືດຍາວເກີນໄປ, ມັນຈະບໍ່ຮອດປີດ້ວຍຊໍ້າ. ຖ້າມັນຍືດຍາວຮອດເຖິງປີ ມັນກໍຈະຊັກຊ້າຂັ້ນຕອນຕໍ່ໄປຂອງພາລະກິດ ແລະ ວຸດທິພາວະຂອງຜູ້ຄົນກໍຈະບໍ່ພຽງພໍ. ຖ້າມັນດົນເກີນໄປ ພວກເຂົາຈະບໍ່ສາມາດທົນຕໍ່ມັນໄດ້, ວຸດທິພາວະຂອງພວກເຂົາແມ່ນມີຂໍ້ຈຳກັດຂອງມັນ. ຫຼັງຈາກທີ່ພາລະກິດຂອງເຮົາເອງຖືກເຮັດໃຫ້ສົມບູນ, ບາດກ້າວຕໍ່ໄປແມ່ນໃຫ້ຜູ້ຄົນຍ່າງຕາມເສັ້ນທາງທີ່ພວກເຂົາຄວນຍ່າງ. ທຸກຄົນຕ້ອງເຂົ້າໃຈກ່ຽວກັບເສັ້ນທາງທີ່ພວກເຂົາຄວນຍ່າງ, ນີ້ແມ່ນເສັ້ນທາງແຫ່ງການທົນທຸກ ແລະ ຂະບວນການຂອງການທົນທຸກ ແລະ ມັນຍັງເປັນເສັ້ນທາງແຫ່ງການຫຼໍ່ຫຼອມຄວາມປະສົງຂອງເຈົ້າທີ່ຈະຮັກພຣະເຈົ້າ. ຄວາມຈິງໃດແດ່ທີ່ເຈົ້າຄວນເຂົ້າສູ່, ຄວາມຈິງໃດແດ່ທີ່ເຈົ້າຄວນເພີ່ມຕື່ມ, ເຈົ້າຄວນມີປະສົບການແນວໃດ ແລະ ເຈົ້າຄວນເຂົ້າຈາກລັກສະນະໃດ, ເຈົ້າຕ້ອງເຂົ້າໃຈທຸກສິ່ງເຫຼົ່ານີ້. ເຈົ້າຕ້ອງຕຽມພ້ອມຕົນເອງໃນປັດຈຸບັນ. ຖ້າເຈົ້າລໍຖ້າຈົນຄວາມຍາກລຳບາກເກີດຂຶ້ນກັບເຈົ້າ, ມັນກໍຈະຊ້າເກີນໄປແລ້ວ. ທຸກຄົນຕ້ອງແບກຮັບພາລະເພື່ອຊີວິດຂອງ

ພວກເຂົາເອງ ແລະ ບໍ່ລໍຖ້າການຕັກເຕືອນຂອງຄົນອື່ນຢູ່ສະເໝີ ຫຼື ລໍຖ້າໃຫ້ຄົນອື່ນດຶງຫູເຈົ້າຢູ່ຕະຫຼອດເວລາ. ເຮົາໄດ້ກ່າວຫຼາຍຢ່າງ ແຕ່ເຈົ້າຍັງບໍ່ຮູ້ຈັກວ່າ ຄວາມຈິງໃດແດ່ທີ່ເຈົ້າຄວນເຂົ້າສູ່ ຫຼື ຕຽມພ້ອມໃຫ້ມີ. ສິ່ງນີ້ກໍສະແດງວ່າ ເຈົ້າບໍ່ໄດ້ພະຍາຍາມໃນການອ່ານພຣະທຳຂອງພຣະເຈົ້າ. ເຈົ້າບໍ່ແບກຮັບພາລະເພື່ອຊີວິດຂອງເຈົ້າເລີຍ, ແລ້ວສິ່ງນັ້ນແມ່ນດີໄດ້ແນວໃດ? ເຈົ້າບໍ່ຊັດເຈນກັບສິ່ງທີ່ເຈົ້າຄວນເຂົ້າສູ່, ເຈົ້າບໍ່ເຂົ້າໃຈສິ່ງທີ່ເຈົ້າຄວນເຂົ້າໃຈ ແລະ ເຈົ້າຍັງສັບສົນແທ້ໆກ່ຽວກັບເສັ້ນທາງທີ່ເຈົ້າຄວນຍ່າງໃນອະນາຄົດ, ເຈົ້າບໍ່ແມ່ນເສດຂອງຊາກເຮືອທີ່ຫັກພັງບໍ? ເຈົ້າມີດີຫຍັງແດ່? ສິ່ງທີ່ພວກເຈົ້າກຳລັງເຮັດໃນປັດຈຸບັນແມ່ນການສ້າງ ແລະ ປູທົນທາງຂອງພວກເຈົ້າເອງ. ເຈົ້າຕ້ອງຮູ້ຈັກວ່າ ຄົນໃດຄວນບັນລຸ ແລະ ມີເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຕ້ອງການຈາກມະນຸດຊາດ. ເຈົ້າຕ້ອງມີຄວາມເຂົ້າໃຈດັ່ງຕໍ່ໄປນີ້: ບໍ່ວ່າຫຍັງກໍຕາມ, ເຖິງແມ່ນເຮົາເສື່ອມຊາມຫຼາຍ, ເຮົາຕ້ອງທົດແທນຂໍ້ບົກຜ່ອງເຫຼົ່ານີ້ຕໍ່ໜ້າພຣະເຈົ້າ. ເມື່ອພຣະເຈົ້າບໍ່ໄດ້ບອກເຮົາ, ເຮົາບໍ່ເຂົ້າໃຈ, ແຕ່ໃນປັດຈຸບັນ ພຣະອົງໄດ້ບອກເຮົາແລ້ວ, ຍ້ອນເຮົາເຂົ້າໃຈ ເຮົາຕ້ອງຟ້າວທົດແທນສິ່ງນັ້ນ, ດຳລົງຊີວິດຕາມຄວາມເປັນມະນຸດທີ່ປົກກະຕິ ແລະ ດຳລົງຊີວິດຕາມລັກສະນະທີ່ສາມາດເປັນທີ່ພໍໃຈຄວາມປະສົງຂອງພຣະເຈົ້າ. ເຖິງແມ່ນເຮົາບໍ່ສາມາດດຳລົງຊີວິດຕາມສິ່ງທີ່ເປໂຕໄດ້ເຮັດ, ຢ່າງໜ້ອຍທີ່ສຸດ ເຮົາຄວນດຳລົງຊີວິດຕາມຄວາມເປັນມະນຸດທີ່ປົກກະຕິ ແລະ ດ້ວຍວິທີນີ້ ເຮົາຈຶ່ງສາມາດປະຕິບັດຕາມຫົວໃຈຂອງພຣະເຈົ້າໄດ້.

ໄລຍະສຸດທ້າຍຂອງເສັ້ນທາງນີ້ແມ່ນເລີ່ມຕົ້ນຈາກປັດຈຸບັນຈົນເຖິງການສິ້ນສຸດຂອງຄວາມຍາກລຳບາກໃນອະນາຄົດ. ໄລຍະນີ້ຂອງເສັ້ນທາງຈະເປັນຕອນທີ່ວຸດທິພາວະທີ່ແທ້ຈິງຂອງຜູ້ຄົນຖືກເປີດເຜີຍພ້ອມກັບວ່າ ພວກເຂົາມີຄວາມເຊື່ອທີ່ແທ້ຈິງ ຫຼື ບໍ່. ຍ້ອນໄລຍະນີ້ຂອງເສັ້ນທາງຈະລຳບາກຫຼາຍກວ່າໄລຍະອື່ນໆທີ່ຖືກນຳພາໃນອະດີດ ແລະ ມັນຈະເປັນເສັ້ນທາງທີ່ມີຫີນຫຼາຍກວ່າແຕ່ກ່ອນ, ມັນຈຶ່ງຖືກເອີ້ນວ່າ "ໄລຍະສຸດທ້າຍຂອງເສັ້ນທາງ". ຄວາມຈິງກໍຄື ມັນບໍ່ແມ່ນສ່ວນສຸດທ້າຍຂອງຫົນທາງຢ່າງແທ້ຈິງ; ນີ້ກໍຍ້ອນວ່າ ຫຼັງຈາກທີ່ຜະເຊີນກັບຄວາມຍາກລຳບາກແລ້ວ, ເຈົ້າຈະຜະເຊີນກັບພາລະກິດແຫ່ງການຂະຫຍາຍຂ່າວປະເສີດ ແລະ ແລ້ວກໍຈະມີຄົນສ່ວນໜຶ່ງທີ່ຈະໄດ້ຜະເຊີນກັບພາລະກິດແຫ່ງການຮັບໃຊ້. ສະນັ້ນ, "ໄລຍະສຸດທ້າຍຂອງເສັ້ນທາງ" ແມ່ນຖືກກ່າວເພື່ອອ້າງອີງເຖິງຄວາມລຳບາກໃນການຫຼໍ່ຫຼອມຜູ້ຄົນ ແລະ ສະພາບແວດລ້ອມທີ່ຮຸນແຮງ. ໃນສ່ວນນັ້ນຂອງເສັ້ນທາງໃນອະດີດແມ່ນເຮົາເອງທີ່ນຳພາເຈົ້າເປັນການສ່ວນຕົວຜ່ານການເດີນທາງຢ່າງມີຄວາມສຸກຂອງເຈົ້າ, ຈັບມືເຈົ້າເພື່ອສັ່ງສອນເຈົ້າ ແລະ ປ້ອນເຂົ້າເຈົ້າ. ເຖິງແມ່ນເຈົ້າໄດ້ຜ່ານການຕີສອນ ແລະ ການພິພາກສາຫຼາຍຄັ້ງກໍຕາມ, ພວກມັນກໍພຽງແຕ່ເປັນການຂ້ຽນຕີຊໍ້າຄືນເລັກນ້ອຍສຳລັບເຈົ້າ. ແນ່ນອນ ສິ່ງນັ້ນໄດ້ເຮັດໃຫ້ທັດສະນະຂອງເຈົ້າກ່ຽວກັບຄວາມເຊື່ອໃນພຣະເຈົ້າປ່ຽນແປງໄປຫຼາຍພໍສົມຄວນ; ມັນຍັງເຮັດໃຫ້ອຸປະນິໄສຂອງເຈົ້າໝັ້ນຄົງຫຼາຍພໍສົມຄວນ ແລະ ເຮັດໃຫ້ເຈົ້າມີຄວາມເຂົ້າໃຈເລັກນ້ອຍກ່ຽວກັບເຮົາ. ແຕ່ເຮົາເວົ້າແບບນີ້, ໃນການຍ່າງຢູ່ໃນສ່ວນນັ້ນຂອງເສັ້ນທາງ, ລາຄາ ຫຼື ຄວາມພະຍາຍາມຢ່າງພາກພຽນທີ່ຜູ້ຄົນຈ່າຍແມ່ນໜ້ອຍຫຼາຍ ເຊິ່ງມັນແມ່ນເຮົາເປັນຜູ້ນຳພາເຈົ້າຈົນເຖິງປັດຈຸບັນ. ນີ້ກໍຍ້ອນວ່າ ເຮົາບໍ່ຮຽກຮ້ອງໃຫ້ເຈົ້າເຮັດສິ່ງໃດເລີຍ ແລະ ເງື່ອນໄຂທີ່ເຮົາຮຽກຮ້ອງຈາກເຈົ້າກໍບໍ່ໄດ້ສູງເກີນໄປ, ເຮົາພຽງແຕ່ເຮັດ

ໃຫ້ເຈົ້າຮັບເອົາສິ່ງທີ່ມີຢູ່ແລ້ວ. ໃນໄລຍະເວລານີ້ ເຮົາໄດ້ສະໜອງຕາມຄວາມຕ້ອງການຂອງພວກເຈົ້າຢ່າງບໍ່ຢຸດຢັ້ງ ແລະ ເຮົາບໍ່ເຄີຍຮຽກຮ້ອງຢ່າງບໍ່ສົມເຫດສົມຜົນຈັກເທື່ອ. ພວກເຈົ້າໄດ້ທົນທຸກກັບການຕີສອນຢູ່ເລື້ອຍໆ ແຕ່ພວກເຈົ້າຍັງບໍ່ບັນລຸຕາມເງື່ອນໄຂດັ່ງເດີມຂອງເຮົາ. ພວກເຈົ້າທໍ້ຖອຍ ແລະ ໝົດກຳລັງໃຈ, ແຕ່ເຮົາບໍ່ໄດ້ຄິດໃສ່ໃຈເຖິງສິ່ງນີ້ ຍ້ອນວ່າ ໃນປັດຈຸບັນນີ້ ແມ່ນເວລາແຫ່ງພາລະກິດສ່ວນຕົວຂອງເຮົາ ແລະ ເຮົາບໍ່ຈິງຈັງກັບ "ການອຸທິດ" ຂອງເຈົ້າທີ່ມີຕໍ່ເຮົາ. ແຕ່ໃນເສັ້ນທາງຕັ້ງແຕ່ນີ້ຕໍ່ໄປ, ເຮົາຈະບໍ່ປະຕິບັດພາລະກິດ ຫຼື ກ່າວ ແລະ ໃນເວລານັ້ນ ເຮົາຈະບໍ່ເຮັດໃຫ້ເຈົ້າສືບຕໍ່ໃນລັກສະນະທີ່ເປັນຕາເບື່ອໜ່າຍແບບນີ້ອີກຕໍ່ໄປ. ເຮົາຈະເຮັດໃຫ້ພວກເຈົ້າມີບົດຮຽນຢ່າງຫຼວງຫຼາຍເພື່ອຮຽນຮູ້ ແລະ ເຮົາຈະບໍ່ເຮັດໃຫ້ພວກເຈົ້າໄດ້ຮັບໃນສິ່ງທີ່ມີຢູ່ແລ້ວ. ວຸດທິພາວະທີ່ແທ້ຈິງທີ່ພວກເຈົ້າມີໃນປັດຈຸບັນຕ້ອງຖືກເປີດໂປງ. ບໍ່ວ່າຄວາມພະຍາຍາມເປັນເວລາຫຼາຍປີຂອງພວກເຈົ້າຈະເກີດຜົນ ຫຼື ບໍ່ ແມ່ນຈະສະແດງອອກໃຫ້ເຫັນຢູ່ໃນວິທີທາງທີ່ພວກເຈົ້າຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງນີ້. ໃນອະດີດ, ພວກເຈົ້າຄິດວ່າ ການເຊື່ອໃນພຣະເຈົ້າເປັນສິ່ງທີ່ງ່າຍດາຍຫຼາຍ ແລະ ນັ້ນກໍຍ້ອນຄິດວ່າພຣະເຈົ້າບໍ່ຈິງຈັງກັບເຈົ້າ. ແລ້ວໃນປັດຈຸບັນນີ້ເດ? ພວກເຈົ້າຄິດວ່າ ການເຊື່ອໃນພຣະເຈົ້າເປັນສິ່ງທີ່ງ່າຍດາຍບໍ? ພວກເຈົ້າຍັງຮູ້ສຶກວ່າ ການເຊື່ອໃນພຣະເຈົ້າມີຄວາມສຸກ ແລະ ບໍ່ຕ້ອງເປັນຫ່ວງກັງວົນຫຍັງ ຄືດັ່ງກັບເດັກນ້ອຍທີ່ກຳລັງຫຼິ້ນຢູ່ໃນຖະໜົນ? ມັນແມ່ນຄວາມຈິງທີ່ພວກເຈົ້າເປັນແກະ, ແຕ່ເຖິງຢ່າງນັ້ນກໍຕາມ ພວກເຈົ້າຕ້ອງສາມາດຍ່າງຕາມເສັ້ນທາງທີ່ພວກເຈົ້າຄວນຍ່າງເພື່ອຕອບແທນພຣະຄຸນຂອງພຣະເຈົ້າ ແລະ ເພື່ອຮັບເອົາພຣະເຈົ້າທີ່ພວກເຈົ້າເຊື່ອຢ່າງແທ້ຈິງ. ຢ່າຫຼິ້ນເກມກັບຕົນເອງ, ຢ່າຫຼອກລວງຕົນເອງ! ຖ້າເຈົ້າສາມາດປະຕິບັດໄລຍະນີ້ຂອງເສັ້ນທາງໄດ້, ເຈົ້າຈະສາມາດເຫັນພາບອັນຍິ່ງໃຫຍ່ທີ່ບໍ່ເຄີຍມີມາກ່ອນຂອງພາລະກິດແຫ່ງການເຜີຍແຜ່ຂ່າວປະເສີດຂອງເຮົາທົ່ວຈັກກະວານທັງປວງ ແລະ ເຈົ້າຈະໂຊກດີທີ່ຈະເປັນມິດສະຫາຍຂອງເຮົາ ແລະ ເຮັດໜ້າທີ່ຂອງເຈົ້າໃນການຂະຫຍາຍພາລະກິດຂອງເຮົາທົ່ວຈັກກະວານ. ໃນເວລານັ້ນ, ເຈົ້າຈະສືບຕໍ່ຍ່າງຕາມເສັ້ນທາງທີ່ເຈົ້າຄວນຍ່າງດ້ວຍຄວາມຍິນດີ. ອະນາຄົດຈະສົດໃສຢ່າງບໍ່ມີວັນສິ້ນສຸດ, ແຕ່ສິ່ງສຳຄັນໃນປັດຈຸບັນແມ່ນຍ່າງໃນໄລຍະສຸດທ້າຍຂອງເສັ້ນທາງນີ້ໃຫ້ດີ. ເຈົ້າຕ້ອງສະແຫວງຫາ ແລະ ຈັດກຽມວ່າຈະເຮັດສິ່ງນີ້ດ້ວຍວິທີໃດ. ນີ້ແມ່ນສິ່ງທີ່ເຈົ້າຕ້ອງເຮັດໃນປັດຈຸບັນ, ນີ້ແມ່ນບັນຫາທີ່ຮີບດ່ວນໃນປັດຈຸບັນ!

# ພຣະທຳຂອງພຣະຄຣິດໃນຂະນະ
# ທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ
# III

(ກໍລະກົດ 1993 ຫາ ມີນາ 1994)

# ເຈົ້າຄວນໃຫ້ຄວາມສົນໃຈກັບພາລະກິດ ໃນອະນາຄົດຂອງເຈົ້າແນວໃດ?

ເຈົ້າສາມາດສື່ສານເຖິງອຸປະນິໄສທີ່ພຣະເຈົ້າສະແດງອອກໃນແຕ່ລະຍຸກ ໃນລັກສະນະທີ່ເປັນຮູບປະທຳ, ດ້ວຍພາສາທີ່ສື່ເຖິງຄວາມສຳຄັນຂອງຍຸກດັ່ງກ່າວໄດ້ຢ່າງເໝາະສົມບໍ? ເຈົ້າ ຜູ້ທີ່ໄດ້ຜະເຊີນພາລະກິດແຫ່ງຍຸກສຸດທ້າຍຂອງພຣະເຈົ້າ ຈະສາມາດບັນລະຍາຍອຸປະນິໄສທີ່ຊອບທຳຂອງພຣະເຈົ້າຢ່າງລະອຽດໄດ້ບໍ? ເຈົ້າຈະສາມາດເປັນພະຍານເຖິງອຸປະນິໄສຂອງພຣະເຈົ້າຢ່າງຊັດເຈນ ແລະ ຢ່າງຖືກຕ້ອງໄດ້ບໍ? ເຈົ້າຈະຖ່າຍທອດສິ່ງທີ່ເຈົ້າໄດ້ເຫັນ ແລະ ຜະເຊີນໃຫ້ແກ່ຜູ້ເຊື່ອທີ່ເປັນຕາສັງເວດ, ທຸກຍາກ ແລະ ເຫຼື້ອມໃສເຫຼົ່ານັ້ນ, ຜູ້ທີ່ຫິວ ແລະ ກະຫາຍຫາຄວາມຊອບທຳ ແລະ ກຳລັງລໍຖ້າໃຫ້ເຈົ້າລ້ຽງດູພວກເຂົາໄດ້ແນວໃດ? ຄົນປະເພດໃດທີ່ກຳລັງລໍຖ້າເຈົ້າໃຫ້ລ້ຽງດູພວກເຂົາ? ເຈົ້າສາມາດຈິນຕະນາການໄດ້ບໍ? ເຈົ້າຮູ້ຈັກພາລະທີ່ຢູ່ເທິງບ່າໄຫຼ່ຂອງເຈົ້າ, ການຝາກຝັງຂອງເຈົ້າ ແລະ ຄວາມຮັບຜິດຊອບຂອງເຈົ້າບໍ? ຄວາມຮູ້ສຶກເຖິງພາລະກິດທີ່ເປັນປະຫວັດສາດຂອງເຈົ້າຢູ່ໃສ? ເຈົ້າຈະຮັບໃຊ້ຢ່າງພໍປະມານດັ່ງເຈົ້ານາຍໃນຍຸກຕໍ່ໄປແນວໃດ? ເຈົ້າມີຄວາມຮູ້ສຶກອັນແຮງກ້າກ່ຽວກັບການເປັນນາຍບໍ? ເຈົ້າຈະອະທິບາຍເຖິງນາຍຂອງທຸກສິ່ງແນວໃດ? ມັນແມ່ນນາຍຂອງສິ່ງມີຊີວິດທີ່ຖືກສ້າງທັງປວງ ແລະ ຂອງສິ່ງວັດຖຸທັງໝົດໃນໂລກບໍ? ເຈົ້າມີແຜນຫຍັງສຳລັບຄວາມກ້າວໜ້າຂອງພາລະກິດຂັ້ນຕໍ່ໄປ? ມີຈັກຄົນທີ່ກຳລັງຄອຍຖ້າໃຫ້ເຈົ້າເພື່ອເປັນຄົນລ້ຽງດູຂອງພວກເຂົາ? ໜ້າທີ່ຂອງເຈົ້າແມ່ນໜ້າທີ່ໆໜັກບໍ? ພວກເຂົາທຸກຍາກ, ເປັນຕາສັງເວດ, ຕາບອດ ແລະ ເຮັດຫຍັງກໍບໍ່ຖືກ, ຮ້ອງໄຫ້ຢູ່ໃນຄວາມມືດ, ຫົນທາງຢູ່ໃສ? ພວກເຂົາປາຖະໜາຫາແສງສະຫວ່າງ ຄ້າຍຄືດາວຕົກ ໃຫ້ລົງມາໃນທັນທີ ແລະ ກຳຈັດກອງກຳລັງແຫ່ງຄວາມມືດ ທີ່ກົດຂີ່ມະນຸດມາເປັນເວລາຫຼາຍປີ. ໃຜສາມາດຮູ້ໄດ້ເຖິງຂອບເຂດສົມບູນທີ່ພວກເຂົາຫວັງຢ່າງໃຈຈົດໃຈຈໍ່ ແລະ ວິທີທີ່ພວກເຂົາປາຖະໜາຫາ ໃນກາງເວັນ ແລະ ກາງຄືນສຳລັບສິ່ງນີ້? ແມ່ນແຕ່ໃນມື້ທີ່ແສງສະຫວ່າງແວວຜ່ານ, ຄົນເຫຼົ່ານີ້ທີ່ທົນທຸກທໍລະມານຢ່າງເລິກເຊິ່ງຍັງຄົງຖືກຈອງຈຳໃນຄຸກມືດໃຕ້ດິນ ໂດຍບໍ່ມີຄວາມຫວັງທີ່ຈະໄດ້ຮັບການປ່ອຍຕົວ; ເມື່ອໃດພວກເຂົາຈະບໍ່ຮ້ອງໄຫ້ອີກຕໍ່ໄປ? ສິ່ງທີ່ເປັນຕາຢ້ານກໍຄືຄວາມໂຊກຮ້າຍຂອງວິນຍານທີ່ບອບບາງເຫຼົ່ານີ້ທີ່ບໍ່ເຄີຍໄດ້ຮັບການພັກຜ່ອນ ແລະ ພວກເຂົາຖືກມັດຢູ່ໃນສະພາວະນີ້ແຕ່ດົນ ໂດຍຂໍ້ຜູກມັດໄຮ້ປານີ ແລະ ປະຫວັດສາດທີ່ແຂງກະດ້າງ. ແລ້ວໃຜເຄີຍໄດ້ຍິນສຽງຮ້ອງໄຫ້ຂອງພວກເຂົາ? ໃຜເຄີຍເບິ່ງສະພາວະທີ່ເປັນທຸກຂອງພວກເຂົາ? ເຈົ້າເຄີຍຄິດບໍວ່າ ຫົວໃຈຂອງພຣະເຈົ້າໂສກເສົ້າ ແລະ ວິຕົກກັງວົນສໍ່າໃດ? ພຣະອົງຈະສາມາດທົນເຫັນມະນຸດຊາດຜູ້ໄຮ້ດຽງສາ ທີ່ພຣະອົງສ້າງດ້ວຍມືພຣະອົງເອງ ຕ້ອງທົນທຸກກັບການທໍລະມານດັ່ງກ່າວໄດ້ແນວໃດ? ໃນທີ່ສຸດແລ້ວ, ມະນຸດເປັນຜູ້ເຄາະຮ້າຍທີ່ຖືກໃສ່ຜິດ. ແລ້ວເຖິງແມ່ນວ່າ ມະນຸດຢູ່ລອດມາຮອດທຸກມື້ນີ້, ໃຜຈະຮູ້ວ່າ ມະນຸດຊາດຖືກໃສ່ຜິດໂດຍຄົນທີ່ຊົ່ວຮ້າຍແຕ່ດົນແລ້ວ? ເຈົ້າລືມໄປແລ້ວບໍວ່າ ເຈົ້າກໍແມ່ນໜຶ່ງໃນຜູ້ເຄາະຮ້າຍນັ້ນ? ຈາກຄວາມຮັກທີ່ເຈົ້າມີຕໍ່ພຣະເຈົ້າ, ເຈົ້າບໍ່ເຕັມໃຈທີ່ຈະພະຍາຍາມຊ່ວຍຜູ້ລອດຊີວິດເຫຼົ່ານີ້ບໍ? ເຈົ້າບໍ່ເຕັມໃຈທີ່ຈະອຸທິດກຳລັງ

ທັງໝົດຂອງເຈົ້າເພື່ອຕອບແທນພຣະເຈົ້າ ຜູ້ທີ່ຮັກມະນຸດຊາດຄືກັບເນື້ອໜັງ ແລະ ເລືອດຂອງພຣະອົງເອງບໍ? ເມື່ອທຸກສິ່ງຖືກກ່າວ ແລະ ກະທຳ, ເຈົ້າຈະຕີຄວາມໝາຍການຖືກໃຊ້ໂດຍພຣະເຈົ້າເພື່ອດຳລົງຊີວິດທີ່ພິເສດຂອງເຈົ້າແນວໃດ? ເຈົ້າມີຄວາມຕັ້ງໃຈ ແລະ ຄວາມໝັ້ນໃຈທີ່ຈະດຳລົງຊີວິດອັນມີຄວາມໝາຍຂອງບຸກຄົນເຫຼື້ອມໃສທີ່ຮັບໃຊ້ພຣະເຈົ້າແທ້ໆບໍ?

# ເປົ້າໝາຍຂອງການຄຸ້ມຄອງມະນຸດຊາດ

ຖ້າຜູ້ຄົນສາມາດເຫັນຢ່າງແທ້ຈິງເຖິງເສັ້ນທາງທີ່ຖືກຕ້ອງກ່ຽວກັບຊີວິດມະນຸດ ພ້ອມທັງເປົ້າໝາຍຂອງການຄຸ້ມຄອງມະນຸດຊາດຂອງພຣະເຈົ້າໄດ້ຢ່າງຊັດເຈນ, ພວກເຂົາກໍຈະບໍ່ຖືວ່າ ອະນາຄົດ ແລະ ໂຊກຊະຕາສ່ວນຕົວຂອງພວກເຂົາເປັນຊັບສົມບັດໃນຫົວໃຈຂອງພວກເຂົາ. ພວກເຂົາຈະບໍ່ສົນໃຈໃນການຮັບໃຊ້ພໍ່ແມ່ຂອງພວກເຂົາ ຜູ້ທີ່ຮ້າຍຍິ່ງກວ່າໝູ ແລະ ໝາຕໍ່ໄປອີກ. ອະນາຄົດ ແລະ ໂຊກຊະຕາຂອງມະນຸດ ແທ້ຈິງແລ້ວ ບໍ່ແມ່ນທີ່ເອີ້ນໃນປັດຈຸບັນວ່າ "ພໍ່ແມ່" ຂອງເປໂຕບໍ? ພວກເຂົາເປັນເໝືອນກັບເນື້ອໜັງ ແລະ ເລືອດຂອງມະນຸດ. ແລ້ວຈຸດໝາຍປາຍທາງ ແລະ ອະນາຄົດຂອງເນື້ອໜັງຈະເປັນແນວໃດ? ມັນຈະເປັນການເຫັນພຣະເຈົ້າໃນຂະນະທີ່ມີຊີວິດຢູ່ ຫຼື ຈະໃຫ້ວິນຍານພົບກັບພຣະເຈົ້າຫຼັງຈາກທີ່ຕາຍໄປແລ້ວ? ເນື້ອໜັງຈະຕົກລົງສູ່ເຕົາຫຼໍ່ໃຫຍ່ໃນມື້ອື່ນຢ່າງທຸກທໍລະມານບໍ ຫຼື ມັນຈະຖືກເຜົາໄໝ້ດ້ວຍແປວໄຟ? ບໍ່ແມ່ນຄໍາຖາມແບບນີ້ກ່ຽວຂ້ອງກັບເນື້ອໜັງຂອງມະນຸດທີ່ຈະອົດທົນຕໍ່ຄວາມໂຊກຮ້າຍ ຫຼື ທົນທຸກກັບຂ່າວໃຫຍ່ທີ່ສຸດເຊິ່ງໃຜກໍຕາມທີ່ຢູ່ໃນກະແສປັດຈຸບັນນີ້ທີ່ມີສະໝອງ ແລະ ແນວຄິດເປັນປົກກະຕິໃສ່ໃຈຫຼາຍທີ່ສຸດບໍ? (ໃນນີ້, ຄວາມທຸກທໍລະມານໝາຍເຖິງການໄດ້ຮັບພອນ; ໝາຍຄວາມວ່າ ການທົດລອງໃນອະນາຄົດຄືຜົນປະໂຫຍດສໍາລັບຈຸດໝາຍປາຍທາງຂອງມະນຸດ. ຄວາມໂຊກຮ້າຍໝາຍເຖິງການບໍ່ສາມາດຍຶດໝັ້ນ ຫຼື ການຖືກຫຼອກລວງ ຫຼື ໝາຍຄວາມວ່າຄົນໜຶ່ງຈະພົບກັບສະຖານະການທີ່ໂຊກຮ້າຍ ແລະ ສູນເສຍຊີວິດຂອງຕົນເອງໃນທ່າມກາງໄພພິບັດ ແລະ ບໍ່ມີຈຸດໝາຍປາຍທາງທີ່ເໝາະສົມສໍາລັບວິນຍານຂອງບຸກຄົນດັ່ງກ່າວ). ເຖິງແມ່ນວ່າມະນຸດມີເຫດຜົນທີ່ຖືກຕ້ອງ ແຕ່ບາງເທື່ອສິ່ງທີ່ພວກເຂົາຄິດທັງໝົດກໍບໍ່ສອດຄ່ອງກັບເຫດຜົນທີ່ພວກເຂົາຄວນມີ. ນີ້ກໍເພາະວ່າ ແທ້ຈິງແລ້ວ ພວກເຂົາທຸກຄົນຂ້ອນຂ້າງສັບສົນ ແລະ ປະຕິບັດຕາມສິ່ງຕ່າງໆຢ່າງຕາບອດ. ພວກເຂົາທັງໝົດຄວນມີຄວາມເຂົ້າໃຈຢ່າງທົ່ວເຖິງກ່ຽວກັບສິ່ງທີ່ພວກເຂົາຄວນເຂົ້າສູ່ ແລະ ໂດຍສະເພາະແລ້ວ ພວກເຂົາຄວນຄົ້ນຫາສິ່ງທີ່ຄວນເຂົ້າສູ່ໃນລະຫວ່າງການທົນທຸກລໍາບາກ (ນັ້ນກໍຄືໃນລະຫວ່າງການຫຼໍ່ຫຼອມໃນເຕົາຫຼໍ່) ແລະ ສິ່ງທີ່ພວກເຂົາຄວນປະກອບມີໃນລະຫວ່າງການທົດລອງແຫ່ງແປວໄຟ. ຢ່າຮັບໃຊ້ພໍ່ແມ່ຂອງເຈົ້າຢູ່ສະເໝີ (ໝາຍເຖິງເນື້ອໜັງ) ຜູ້ເຊິ່ງເປັນຄືກັບໝູ ແລະ ໝາ ແລະ ຮ້າຍຍິ່ງກວ່າມົດ ແລະ ແມງໄມ້. ເຫດຜົນຫຍັງທີ່ຈະຕ້ອງໄປທໍລະມານໃຈກັບສິ່ງນັ້ນ, ຕ້ອງໄປຄິດໜັກ ແລະ ທໍລະມານສະໝອງຕົນເອງກັບສິ່ງນັ້ນ? ເນື້ອໜັງບໍ່ໄດ້ເປັນຂອງເຈົ້າ, ແຕ່ຢູ່ໃນກໍາມືຂອງພຣະເຈົ້າ ແລະ ພຣະອົງບໍ່ພຽງຄວບຄຸມເຈົ້າເທົ່ານັ້ນ ແຕ່ຍັງບັນຊາການຊາຕານອີກດ້ວຍ. (ດັ່ງເດີມໝາຍຄວາມວ່າ ມັນເປັນຂອງຊາຕານ. ສາມາດເວົ້າແບບນັ້ນໄດ້ ກໍເພາະວ່າ ຊາຕານກໍຢູ່ໃນກໍາມືຂອງພຣະເຈົ້າເຊັ່ນກັນ. ເພາະວ່າ ການເວົ້າແບບນັ້ນມັນໜ້າເຊື່ອກວ່າ ເຊິ່ງມັນຊີ້ໃຫ້ເຫັນວ່າ ມະນຸດບໍ່ໄດ້ຢູ່ພາຍໃຕ້ອໍານາດຂອງຊາຕານໂດຍສິ້ນເຊີງ, ແຕ່ຢູ່ໃນກໍາມືຂອງພຣະເຈົ້າ). ເຈົ້າກໍາລັງດໍາລົງຊີວິດຢູ່ພາຍໃຕ້ຄວາມທົນທຸກທໍລະມານຂອງເນື້ອໜັງ, ແຕ່ເນື້ອໜັງເປັນຂອງເຈົ້າບໍ? ມັນຢູ່ພາຍໃຕ້ການຄວບຄຸມຂອງເຈົ້າບໍ? ເປັນຫຍັງຈຶ່ງຕ້ອງພະຍາຍາມຄິດຢ່າງໜັກກ່ຽວກັບມັນດ້ວຍ? ເປັນຫຍັງຈຶ່ງຕ້ອງ

ຂໍຮ້ອງພຣະເຈົ້າຢ່າງບ້າປ່ວງເພື່ອເນື້ອໜັງທີ່ເໜົ່າເໝັນຂອງເຈົ້າ ເຊິ່ງຖືກປະນາມ, ສາບແຊ່ງ ແລະ ເສື່ອມຊາມໂດຍວິນຍານສົກກະປົກເປັນເວລາດົນນານມາແລ້ວ? ເປັນຫຍັງຈຶ່ງຕ້ອງເອົາພັກພວກຂອງຊາຕານມາຢູ່ໃກ້ຫົວໃຈຂອງເຈົ້າດ້ວຍ? ເຈົ້າບໍ່ກັງວົນບໍວ່າ ເນື້ອໜັງຈະທຳລາຍອະນາຄົດທີ່ແທ້ຈິງຂອງເຈົ້າ, ທຳລາຍຄວາມຫວັງອັນງົດງາມຂອງເຈົ້າ ແລະ ຈຸດໝາຍປາຍທາງທີ່ແທ້ຈິງສຳລັບຊີວິດຂອງເຈົ້າ?

ເສັ້ນທາງແຫ່ງປັດຈຸບັນບໍ່ງ່າຍທີ່ຈະຍ່າງເລີຍ. ມັນສາມາດເວົ້າໄດ້ວ່າ ມັນຍາກທີ່ຈະຍ່າງຕາມ ແລະ ຫາຍາກທີ່ສຸດຈາກຍຸກຕ່າງໆ. ເຖິງຢ່າງໃດກໍຕາມ, ແມ່ນໃຜຈະຄິດວ່າ ພຽງເນື້ອໜັງຂອງມະນຸດເທົ່ານັ້ນກໍຈະພຽງພໍທີ່ຈະທຳລາຍເຂົາໄດ້. ແນ່ນອນ ພາລະກິດໃນປັດຈຸບັນແມ່ນລ້ຳຄ່າເໝືອນດັ່ງຝົນໃນລະດູໃບໄມ້ປົ່ງ ແລະ ມີຄ່າເໝືອນດັ່ງຄວາມເມດຕາທີ່ພຣະເຈົ້າມີຕໍ່ມະນຸດ. ເຖິງຢ່າງໃດກໍຕາມ, ຖ້າມະນຸດບໍ່ຮູ້ຈັກເປົ້າໝາຍຂອງພາລະກິດປັດຈຸບັນຂອງພຣະເຈົ້າ ຫຼື ເຂົ້າໃຈເຖິງທາດແທ້ຂອງມະນຸດຊາດແລ້ວຈະເວົ້າເຖິງຄວາມລ້ຳຄ່າ ແລະ ການມີຄ່າຂອງມັນໄດ້ແນວໃດ? ເນື້ອໜັງບໍ່ໄດ້ເປັນຂອງມະນຸດເອງ, ສະນັ້ນບໍ່ມີໃຜສາມາດເຫັນໄດ້ຢ່າງແຈ່ມແຈ້ງວ່າ ຈຸດໝາຍປາຍທາງຂອງຕົນຈະຢູ່ໃສກັນແທ້. ແຕ່ຢ່າງໃດກໍຕາມ, ເຈົ້າຄວນຮູ້ດີວ່າ ພຣະຜູ້ເປັນເຈົ້າແຫ່ງການຊົງສ້າງຈະສົ່ງຄືນມະນຸດຊາດທີ່ຖືກສ້າງຂຶ້ນໃຫ້ຢູ່ຕຳແໜ່ງເດີມຂອງພວກເຂົາ ແລະ ຟື້ນຟູລັກສະນະດັ້ງເດີມຂອງພວກເຂົາຈາກເວລາແຫ່ງການຊົງສ້າງພວກເຂົາ. ພຣະອົງຈະຖອນເອົາລົມຫາຍໃຈທີ່ພຣະອົງມອບໃຫ້ມະນຸດນັ້ນກັບຄືນທັງໝົດ ແລະ ເອົາກະດູກ ແລະ ເນື້ອໜັງຂອງເຂົາຄືນ ແລະ ສົ່ງທຸກສິ່ງຄືນໃຫ້ພຣະຜູ້ເປັນເຈົ້າແຫ່ງການຊົງສ້າງ. ພຣະອົງຈະປ່ຽນແປງ ແລະ ສ້າງມະນຸດຊາດຄືນໃໝ່ທັງໝົດ ແລະ ເອົາມໍລະດົກທັງໝົດຈາກມະນຸດຄືນ ເຊິ່ງບໍ່ໄດ້ເປັນຂອງມະນຸດຊາດ ແຕ່ເປັນຂອງພຣະເຈົ້າ ແລະ ພຣະອົງຈະບໍ່ມອບໃຫ້ມະນຸດຊາດອີກ. ນີ້ກໍຍ້ອນວ່າ ບໍ່ມີສິ່ງໃດເປັນຂອງມະນຸດຊາດມາແຕ່ດັ່ງເດີມ. ພຣະອົງຈະເອົາທຸກສິ່ງຄືນ, ນີ້ບໍ່ແມ່ນເປັນການປຸ້ນແບບບໍ່ຍຸຕິທຳ, ແຕ່ໝາຍເຖິງການຟື້ນຟູສະຫວັນ ແລະ ແຜ່ນດິນໂລກສູ່ສະພາວະດັ່ງເດີມຂອງພວກມັນ ແລະ ເພື່ອປະຕິຮູບ ແລະ ສ້າງມະນຸດຂຶ້ນໃໝ່. ນີ້ແມ່ນຈຸດໝາຍປາຍທາງທີ່ສົມເຫດສົມຜົນສຳລັບມະນຸດ, ເຖິງແມ່ນວ່າ ບາງທີມັນຈະບໍ່ແມ່ນການຮັບເອົາເນື້ອໜັງຄືນ ຫຼັງຈາກທີ່ໄດ້ຖືກຂ້ຽນຕີຕາມທີ່ມະນຸດຈິນຕະນາການ. ພຣະເຈົ້າບໍ່ຕ້ອງການຮ່າງກະດູກຂອງເນື້ອໜັງຫຼັງຈາກທີ່ມັນຖືກທຳລາຍແລ້ວ; ພຣະອົງຕ້ອງການອົງປະກອບດັ່ງເດີມໃນມະນຸດທີ່ເປັນຂອງພຣະເຈົ້າໃນເບື້ອງຕົ້ນ. ດ້ວຍເຫດນີ້, ພຣະອົງຈະບໍ່ທຳລາຍມະນຸດ ຫຼື ກຳຈັດເນື້ອໜັງຂອງມະນຸດຢ່າງສິ້ນເຊີງ, ຍ້ອນເນື້ອໜັງຂອງມະນຸດບໍ່ແມ່ນກຳມະສິດສ່ວນຕົວທີ່ເປັນຂອງມະນຸດ. ກົງກັນຂ້າມ, ມັນແມ່ນສ່ວນປະກອບຂອງພຣະເຈົ້າ ຜູ້ເຊິ່ງຄຸ້ມຄອງມະນຸດຊາດ. ພຣະອົງຈະທຳລາຍເນື້ອໜັງຂອງມະນຸດເພື່ອ "ຄວາມສຸກ" ຂອງພຣະອົງໄດ້ແນວໃດ? ໃນເວລານີ້, ເຈົ້າໄດ້ປະຖິ້ມທຸກສິ່ງທີ່ມາຈາກເນື້ອໜັງຂອງເຈົ້າ ເຊິ່ງບໍ່ມີລາຄາແມ່ນແຕ່ເງິນເຜີນນີຫຼຽນດຽວແລ້ວບໍ? ຖ້າເຈົ້າສາມາດເຂົ້າໃຈສາມສິບເປີເຊັນຂອງພາລະກິດແຫ່ງຍຸກສຸດທ້າຍ (ພຽງແຕ່ສາມສິບເປີເຊັນນີ້ ໝາຍເຖິງການ ເຂົ້າໃຈພາລະກິດຂອງພຣະວິນຍານບໍລິສຸດໃນປັດຈຸບັນພ້ອມທັງພາລະກິດແຫ່ງພຣະທຳທີ່ພຣະເຈົ້າປະຕິບັດໃນຍຸກສຸດທ້າຍ), ແລ້ວເຈົ້າກໍຈະບໍ່ສືບຕໍ່ "ຮັບໃຊ້" ຫຼື "ອຸທິດ" ກັບເນື້ອໜັງຂອງເຈົ້າແບບທີ່ເຈົ້າເຮັດໃນປັດຈຸບັນ ເຊິ່ງຖືກເຮັດໃຫ້ເສື່ອມຊາມເປັນເວລາ

ຫຼາຍປີແລ້ວ. ເຈົ້າຄວນເຫັນໄດ້ຢ່າງຊັດເຈນວ່າ ໃນຕອນນີ້ ມະນຸດໄດ້ພັດທະນາສູ່ສະພາວະທີ່ບໍ່ເຄີຍມີມາກ່ອນ ແລະ ຈະບໍ່ສືບຕໍ່ພັດທະນາໄປຂ້າງໜ້າເໝືອນກັບກົງລໍ້ແຫ່ງປະຫວັດສາດອີກຕໍ່ໄປ. ເນື້ອໜັງທີ່ເສື່ອມສະຫຼາຍຂອງເຈົ້າໄດ້ຖືກປົກຫຸ້ມດ້ວຍແມງວັນ ແລ້ວມັນຈະມີອຳນາດທີ່ຈະຫັ້ນປ່ຽນກົງລໍ້ແຫ່ງປະຫວັດສາດ ທີ່ພຣະເຈົ້າໄດ້ເຮັດໃຫ້ມັນສືບຕໍ່ໝູນຈົນມາເຖິງທຸກວັນນີ້ໄດ້ແນວໃດ? ມັນຈະສາມາດເຮັດໃຫ້ໂມງແຫ່ງຍຸກສຸດທ້າຍທີ່ມີດງຽບກັບມາສົ່ງສຽງດັງອີກຄັ້ງ ແລະ ສືບຕໍ່ໝູນຕາມເຂັມໂມງໄດ້ແນວໃດ? ມັນຈະສາມາດປະຕິຮູບໂລກຄືນໃໝ່ທີ່ເບິ່ງຄືກັບວ່າ ປົກຫຸ້ມດ້ວຍໝອກໜາໄດ້ແນວໃດ? ເນື້ອໜັງຂອງເຈົ້າສາມາດເຮັດໃຫ້ພູເຂົາ ແລະ ແມ່ນໍ້າຟື້ນຄືນໄດ້ບໍ? ເນື້ອໜັງຂອງເຈົ້າທີ່ມີໜ້າທີ່ພຽງໜ້ອຍດຽວ ຈະສາມາດຟື້ນຟູໂລກມະນຸດແບບນີ້ຕາມທີ່ເຈົ້າປາຖະໜາໄດ້ບໍ? ເຈົ້າສາມາດໃຫ້ການສຶກສາກັບລູກຫຼານຂອງເຈົ້າເພື່ອໃຫ້ກາຍມາເປັນ "ມະນຸດ" ໄດ້ແທ້ບໍ? ບັດນີ້ ເຈົ້າເຂົ້າໃຈແລ້ວບໍ? ເນື້ອໜັງຂອງເຈົ້າເປັນຂອງໃຜກັນແທ້? ເຈດຕະນາໃນເບື້ອງຕົ້ນຂອງພຣະເຈົ້າສຳລັບການຊ່ວຍມະນຸດໃຫ້ລອດພົ້ນ, ສຳລັບການເຮັດໃຫ້ມະນຸດສົມບູນ ແລະ ສຳລັບການປ່ຽນແປງມະນຸດບໍ່ແມ່ນການມອບບ້ານເກີດທີ່ສວຍງາມໃຫ້ກັບເຈົ້າ ຫຼື ນຳເອົາບ່ອນພັກຜ່ອນທີ່ສະຫງົບສຸກມາໃຫ້ເນື້ອໜັງຂອງມະນຸດ; ມັນແມ່ນເພື່ອຄວາມສະຫງ່າລາສີຂອງພຣະອົງ ແລະ ຄຳພະຍານຂອງພຣະອົງ, ເພື່ອຄວາມສຸກທີ່ດີກວ່າຂອງມະນຸດຊາດໃນອະນາຄົດ ແລະ ເພື່ອພວກເຂົາຈະໄດ້ຮັບການພັກຜ່ອນໃນອີກບໍ່ດົນ. ຢ່າງໃດກໍຕາມ, ມັນບໍ່ແມ່ນເພື່ອເນື້ອໜັງຂອງເຈົ້າ, ຍ້ອນມະນຸດເປັນຕົ້ນທຶນຂອງການຄຸ້ມຄອງຂອງພຣະເຈົ້າ ແລະ ເນື້ອໜັງມະນຸດກໍເປັນພຽງສ່ວນປະກອບເທົ່ານັ້ນ. (ມະນຸດແມ່ນສິ່ງຂອງທີ່ມີທັງວິນຍານ ແລະ ຮ່າງກາຍ, ໃນຂະນະທີ່ເນື້ອໜັງເປັນພຽງສິ່ງທີ່ເນົ່າເປື່ອຍເທົ່ານັ້ນ. ນີ້ໝາຍຄວາມວ່າເນື້ອໜັງເປັນເຄື່ອງມືສຳລັບໃຊ້ໃນແຜນການຄຸ້ມຄອງ). ເຈົ້າຄວນຮູ້ວ່າ ການທີ່ພຣະເຈົ້າເຮັດໃຫ້ມະນຸດສົມບູນ, ເຮັດໃຫ້ມະນຸດຄົບຖ້ວນ ແລະ ຮັບເອົາມະນຸດນັ້ນ ບໍ່ໄດ້ນຳຫຍັງມາສູ່ມະນຸດເລີຍ ນອກຈາກດາບ ແລະ ການຕີສອນເນື້ອໜັງຂອງພວກເຂົາ ແລະ ການທົນທຸກທີ່ບໍ່ສິ້ນສຸດ, ໄຟທີ່ເຜົາໄໝ້, ການພິພາກສາທີ່ໄຮ້ປານີ, ການຂ້ຽນຕີ ແລະ ຄຳສາບແຊ່ງ ພ້ອມທັງການທົດລອງທີ່ບໍ່ມີຂອບເຂດ. ສິ່ງດັ່ງກ່າວແມ່ນເລື່ອງລາວພາຍໃນ ແລະ ຄວາມຈິງຂອງພາລະກິດແຫ່ງການຄຸ້ມຄອງມະນຸດ. ເຖິງຢ່າງໃດກໍຕາມ, ທຸກສິ່ງເຫຼົ່ານີ້ແມ່ນແນໃສ່ເນື້ອໜັງຂອງມະນຸດ ແລະ ປາຍຫອກແຫ່ງເຈດຕະນາຮ້າຍທີ່ໄຮ້ຄວາມປານີທັງໝົດນີ້ແມ່ນແນໃສ່ເນື້ອໜັງຂອງມະນຸດ (ຍ້ອນມະນຸດບໍ່ມີຄວາມຜິດ). ທັງໝົດນີ້ແມ່ນເພື່ອຄວາມສະຫງ່າລາສີ ແລະ ຄຳພະຍານຂອງພຣະອົງ ແລະ ເພື່ອການຄຸ້ມຄອງຂອງພຣະອົງ. ນີ້ກໍເພາະວ່າ ພາລະກິດຂອງພຣະອົງບໍ່ແມ່ນເພື່ອມະນຸດຊາດແຕ່ຢ່າງດຽວ, ແຕ່ແມ່ນເພື່ອແຜນການທັງໝົດ ແລະ ເພື່ອບັນລຸຄວາມປະສົງດັ່ງເດີມຂອງພຣະອົງເມື່ອພຣະອົງສ້າງມະນຸດຊາດ. ດັ່ງນັ້ນ, ບາງທີເກົ້າສິບເປີເຊັນຂອງສິ່ງທີ່ມະນຸດປະສົບແມ່ນຄວາມທົນທຸກ ແລະ ການທົດລອງແຫ່ງແປວໄຟ ແລະ ມີມື້ແຫ່ງຄວາມຫວານຊື່ນ ແລະ ມື້ແຫ່ງຄວາມສຸກໜ້ອຍທີ່ສຸດ ຫຼື ບໍ່ມີເລີຍ ເຊິ່ງເປັນມື້ທີ່ເນື້ອໜັງຂອງມະນຸດປາຖະໜາ, ແຮງໄກທີ່ ມະນຸດຈະສາມາດມີຊ່ວງເວລາທີ່ຈະໄດ້ຮັບຄວາມສຸກໃນເນື້ອໜັງ ແລະ ໃຊ້ເວລາທີ່ສວຍງາມກັບພຣະເຈົ້າ. ເນື້ອໜັງແມ່ນສົກກະປົກ, ດັ່ງນັ້ນ ສິ່ງທີ່ເນື້ອໜັງຂອງມະນຸດເຫັນ ຫຼື

ໄດ້ຮັບແມ່ນບໍ່ມີຫຍັງເລີຍ ນອກຈາກການຂ້ຽນຕີຂອງພຣະເຈົ້າ ທີ່ມະນຸດບໍ່ມັກ ແລະ ຄືກັບວ່າ ມັນຂາດເຫດຜົນທີ່ປົກກະຕິ. ນີ້ກໍຍ້ອນວ່າ ພຣະອົງຈະສະແດງອຸປະນິໄສທີ່ຊອບທຳຂອງພຣະອົງທີ່ມະນຸດບໍ່ມັກ, ພຣະອົງຈະບໍ່ອົດທົນຕໍ່ການກະທຳຜິດຂອງມະນຸດ ແລະ ຄວາມກຽດຊັງສັດຕູ. ພຣະເຈົ້າເປີດເຜີຍອຸປະນິໄສທັງໝົດຂອງພຣະອົງດ້ວຍທຸກວິທີທາງທີ່ຈຳເປັນຢ່າງເປີດເຜີຍ ເພື່ອສິ້ນສຸດພາລະກິດແຫ່ງການຕໍ່ສູ້ກັບຊາຕານເປັນເວລາຫົກພັນປີຂອງພຣະອົງ ນັ້ນກໍຄື ພາລະກິດແຫ່ງຄວາມລອດພົ້ນຂອງມະນຸດຊາດທັງປວງ ແລະ ການທຳລາຍຊາຕານເຖົ້າ!

# ທາດແທ້ ແລະ ຕົວຕົນຂອງມະນຸດ

ທີ່ຈິງແລ້ວ ຊາວອິດສະຣາເອນບໍ່ໄດ້ຜິດຫວັງ, ພວກເຂົາໄດ້ເຫັນການປະຕິບັດພາລະກິດຂອງພຣະເຈົ້າຫຼາຍກວ່າຫົກພັນປີຜ່ານມາ ເນື່ອງຈາກເຮົາບໍ່ເຄີຍປະຖິ້ມພວກເຂົາເລີຍ. ກົງກັນຂ້າມ, ຍ້ອນບັນພະບຸລຸດຂອງພວກເຂົາໄດ້ກິນໝາກໄມ້ຈາກຕົ້ນໄມ້ແຫ່ງຄວາມຮູ້ຂອງຄວາມດີ ແລະ ຄວາມຊົ່ວຮ້າຍ ເຊິ່ງຜູ້ຊົ່ວຮ້າຍໄດ້ມອບໃຫ້ພວກເຂົາເປັນຂອງຂວັນ, ພວກເຂົາຈຶ່ງໄດ້ປະຖິ້ມເຮົາເພື່ອຄວາມບາບ. ຄວາມດີເປັນຂອງເຮົາສະເໝີ ໃນຂະນະທີ່ຄວາມຊົ່ວຮ້າຍເປັນຂອງຜູ້ຊົ່ວຮ້າຍ ທີ່ຊັກຈູງເຮົາເພື່ອເຫັນແກ່ຄວາມບາບ. ເຮົາບໍ່ກ່າວໂທດມະນຸດ ຫຼື ເຮົາບໍ່ທຳລາຍລ້າງພວກເຂົາຢ່າງປ່າເຖື່ອນ ແລະ ເຮັດໃຫ້ພວກເຂົາໄດ້ຮັບການຂ້ຽນຕີໂດຍບໍ່ມີຄວາມເມດຕາ ເນື່ອງຈາກວ່າ ຄວາມຊົ່ວຮ້າຍບໍ່ໄດ້ເປັນຂອງມະນຸດມາແຕ່ຕົ້ນ. ດັ່ງນັ້ນ ເຖິງແມ່ນວ່າ ຊາວອິດສະຣາເອນຈະຕອກເຮົາໃສ່ໄມ້ກາງແຂນຢ່າງເປີດເຜີຍ ແຕ່ພວກເຂົາທີ່ໄດ້ລໍຖ້າພຣະເມຊີອາ ແລະ ພຣະເຢໂຮວາ ແລະ ປາດຖະໜາເຖິງພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນ ກໍບໍ່ເຄີຍລືມສັນຍາຂອງເຮົາ: ເພາະວ່າ ເຮົາບໍ່ໄດ້ປະຖິ້ມພວກເຂົາ. ສຳຄັນໄປກວ່ານັ້ນ ເຮົາໄດ້ເອົາເລືອດເປັນຫຼັກຖານ ສຳລັບສັນຍາທີ່ເຮົາໄດ້ໃຫ້ກັບມະນຸດ. ຂໍ້ແທ້ຈິງນີ້ໄດ້ກາຍເປັນ “ສັນຍາດ້ວຍເລືອດ” ທີ່ຈາລຶກໃນຫົວໃຈຂອງຄົນໜຸ່ມ ແລະ ຄົນບໍລິສຸດ ຄືດັ່ງກາເຄື່ອງໝາຍ ແລະ ຄືດັ່ງການຢູ່ຮ່ວມກັນລະຫວ່າງສະຫວັນ ແລະ ແຜ່ນດິນໂລກຕະຫຼອດໄປເປັນນິດ. ເນື່ອງຈາກວ່າ ເຮົາບໍ່ເຄີຍຫຼອກລວງວິນຍານທີ່ໂສກເສົ້າເຫຼົ່ານັ້ນ ທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າ, ໄດ້ຄັດເລືອກ ແລະ ຫຼັງຈາກນັ້ນກໍໄຖ່ບາບ ແລະ ຮັບເອົາ; ແລະ ຜູ້ທີ່ຮັກເຮົາຫຼາຍກວ່າຄົນຊົ່ວຮ້າຍ ພວກເຂົາຄາດຫວັງການກັບມາຂອງເຮົາຢ່າງກະຕືລືລົ້ນ ແລະ ລໍຖ້າພົບກັບເຮົາດ້ວຍຄວາມຮ້ອນຮົນ. ເນື່ອງຈາກວ່າ ເຮົາບໍ່ເຄີຍລຶບສັນຍາທີ່ເຮົາໄດ້ສ້າງຂຶ້ນຮ່ວມກັບພວກເຂົາດ້ວຍເລືອດ, ມັນກໍບໍ່ແປກໃຈເລີຍທີ່ພວກເຂົາໄດ້ລໍຖ້າຢ່າງຈິງຈັງ. ເຮົາຈະຈັບເອົາແກະນ້ອຍເຫຼົ່ານີ້ທີ່ເຮົາໄດ້ສູນເສຍເປັນເວລາຫຼາຍປີກັບຄືນມາ ເນື່ອງຈາກວ່າ ເຮົາຮັກມະນຸດມາຕະຫຼອດ; ມັນເປັນພຽງແຕ່ວ່າ ອົງປະກອບແຫ່ງຄວາມຊົ່ວຮ້າຍໄດ້ຖືກເພີ່ມເຂົ້າໃນຄວາມດີຂອງພວກເຂົາ. ເຮົາຈະຮັບເອົາວິນຍານທີ່ໜ້າສົງສານຜູ້ທີ່ຮັກເຮົາ ແລະ ຜູ້ທີ່ເຮົາໄດ້ຮັກແຕ່ດົນແລ້ວ, ແຕ່ເຮົາຈະເອົາຜູ້ຊົ່ວຮ້າຍເຫຼົ່ານັ້ນ ທີ່ບໍ່ເຄີຍຮັກເຮົາ ແລະ ປະພຶດຕົນເປັນສັດຕູເຂົ້າມາສູ່ເຮືອນຂອງເຮົາໄດ້ແນວໃດ? ເຮົາຈະບໍ່ເອົາລູກຫຼານຂອງຜີຮ້າຍ ແລະ ງູພິດທີ່ກຽດຊັງ, ຕໍ່ຕ້ານ, ຂັດຂືນ, ໂຈມຕີ ແລະ ສາບແຊ່ງເຮົາເຂົ້າສູ່ອານາຈັກຂອງເຮົາ ເຖິງແມ່ນວ່າ ເຮົາຈະໄດ້ສ້າງສັນຍາໄວ້ກັບມະນຸດດ້ວຍເລືອດກໍຕາມ. ເຈົ້າຄວນຮູ້ຢ່າງແທ້ຈິງວ່າ ແມ່ນຫຍັງຄືຈຸດປະສົງຂອງພາລະກິດຂອງເຮົາ ແລະ ເຮົາດຳເນີນພາລະກິດນັ້ນເພື່ອໃຜ. ຄວາມຮັກຂອງເຈົ້າປະກອບດ້ວຍຄວາມດີ ຫຼື ຄວາມຊົ່ວຮ້າຍ? ຄວາມຮູ້ຂອງເຈົ້າກ່ຽວກັບເຮົາເປັນຄືກັບເດວິດ ແລະ ໂມເຊບໍ ຫຼື ບໍ່ແມ່ນ? ເຈົ້າຮັບໃຊ້ເຮົາຄືກັນກັບອັບຣາຮາມບໍ ຫຼື ບໍ່ແມ່ນ? ແນ່ນອນເຈົ້າຖືກເຮົາເຮັດໃຫ້ສົມບູນ ແຕ່ເຈົ້າກໍຄວນຮູ້ວ່າ ເຈົ້າຈະຕາງໜ້າໃຫ້ໃຜ ພ້ອມນັ້ນຜົນໄດ້ຮັບຂອງໃຜທີ່ເຈົ້າຈະແບ່ງປັນ. ຕະຫຼອດຊີວິດຂອງເຈົ້າ, ເຈົ້າມີການເກັບກ່ຽວທີ່ມີຄວາມສຸກ ແລະ ອຸດົມສົມບູນໃນປະສົບການຂອງເຈົ້າກັບພາລະກິດຂອງເຮົາບໍ? ມັນອຸດົມສົມບູນ ແລະ ມີໝາກ

ຜິນບໍ? ເຈົ້າຄວນໄຕ່ຕອງຕົວເອງ. ເປັນເວລາຫຼາຍປີທີ່ເຈົ້າໄດ້ເຮັດວຽກຢ່າງໜັກເພື່ອເຮົາ ແຕ່ເຈົ້າເຄີຍໄດ້ຮັບຫຍັງບໍ? ເຈົ້າໄດ້ປະສົບກັບການປ່ຽນແປງ ຫຼື ໄດ້ຮັບຫຍັງບໍ? ໃນການແລກປ່ຽນກັບປະສົບການຂອງເຈົ້າຢ່າງລຳບາກ, ເຈົ້າໄດ້ກາຍເປັນຄືກັບເປໂຕ ທີ່ຖືກກາງແຂນ ຫຼື ໂປໂລທີ່ຖືກໂຈມຕີລົງ ແລະ ໄດ້ຮັບແສງສະຫວ່າງທີ່ຍິ່ງໃຫຍ່ບໍ? ເຈົ້າຄວນມີຄວາມຮູ້ສຶກບາງຢ່າງເຖິງສິ່ງເຫຼົ່ານີ້. ເຮົາບໍ່ໄດ້ເວົ້າ ແລະ ຢູ່ໃນຊີວິດຂອງເຈົ້າຕະຫຼອດເວລາ, ເຊິ່ງນ້ອຍກວ່າເມັດມາສຕາດ ແລະ ນ້ອຍກວ່າເມັດຊາຍ. ເວົ້າງ່າຍໆກໍຄື, ມັນແມ່ນມະນຸດທີ່ເຮົາຄຸ້ມຄອງ. ຢ່າງໃດກໍຕາມ, ເຮົາບໍ່ໄດ້ພິຈາລະນາຊີວິດຂອງມະນຸດ ທີ່ຄັ້ງໜຶ່ງເຮົາເຄີຍກຽດຊັງ ແຕ່ຫຼັງຈາກນັ້ນກໍໄດ້ເກັບຂຶ້ນມາໃໝ່ ໃຫ້ເປັນສ່ວນສຳຄັນຂອງການຄຸ້ມຄອງຂອງເຮົາ. ເຈົ້າຄວນມີແນວຄິດຢ່າງຊັດເຈນກ່ຽວກັບທຳມະຊາດທີ່ແທ້ຈິງໃນຕົວຕົນຂອງເຈົ້າໃນເມື່ອກ່ອນ ແລະ ແມ່ນໃຜທີ່ເຈົ້າເປັນທາດຮັບໃຊ້. ສະນັ້ນ, ເຮົາຈຶ່ງບໍ່ໃຊ້ໃບໜ້າຂອງມະນຸດທີ່ຄືກັບໃບໜ້າຊາຕານມາເປັນວັດຖຸດິບໃນການຄຸ້ມຄອງຜູ້ຄົນ ເນື່ອງຈາກວ່າ ມະນຸດບໍ່ແມ່ນສິ່ງທີ່ມີຄ່າ. ພວກເຈົ້າຄວນທົບທວນຄືນທັດສະນະຄະຕິຂອງເຮົາທີ່ມີຕໍ່ພວກເຈົ້າໃນແຕ່ຕົ້ນ ແລະ ຈົດຈຳວິທີທີ່ເຮົາກ່າວຕໍ່ພວກເຈົ້າໃນເວລານັ້ນ ເຊິ່ງເປັນອຸທອນທີ່ມີຄວາມໝາຍຢ່າງແທ້ຈິງ. ເຈົ້າຄວນຮູ້ວ່າ ຍີ່ຫໍ້ທີ່ເຈົ້າໃສ່ບໍ່ໄດ້ປາສະຈາກເຫດຜົນຂອງມັນ. ເຮົາສັນນິຖານວ່າ ພວກເຈົ້າທຸກຄົນຮູ້ວ່າ ພວກເຈົ້າບໍ່ໄດ້ເປັນຂອງພຣະເຈົ້າ ແຕ່ຖືກຊາຕານຈັບຕົວໄປໃນເບື້ອງຕົ້ນ ແລະ ຮັບໃຊ້ໃນເຮືອນຂອງມັນໃນຖານະເປັນຜູ້ຮັບໃຊ້ທີ່ຈົງຮັກພັກດີ. ຍິ່ງໄປກວ່ານັ້ນ ພວກເຈົ້າໄດ້ລືມເຮົາແຕ່ດົນແລ້ວ ຍ້ອນວ່າ ພວກເຈົ້າຢູ່ນອກເຮືອນຂອງເຮົາແຕ່ດົນ ແລະ ຢູ່ໃນກຳມືຂອງຄົນຊົ່ວຮ້າຍ. ຜູ້ທີ່ເຮົາຊ່ວຍໃຫ້ພົ້ນແມ່ນຜູ້ຄົນທີ່ເຮົາໄດ້ກຳນົດລ່ວງໜ້າແຕ່ດົນນານ ແລະ ຖືກເຮົາໄຖ່ບາບໃຫ້ແລ້ວ ໃນຂະນະທີ່ພວກເຈົ້າແມ່ນວິນຍານທີ່ໜ້າສົງສານ ທີ່ຖືກຈັດໃຫ້ຢູ່ໃນທ່າມກາງມະນຸດແມ່ນຂໍ້ຍົກເວັ້ນຈາກກົດລະບຽບນີ້. ພວກເຈົ້າຄວນຮູ້ວ່າ ພວກເຈົ້າບໍ່ເໝາະສົມທີ່ຈະຢູ່ໃນເຮືອນຂອງເດວິດ ຫຼື ຢາໂຄບ ແຕ່ເໝາະສົມທີ່ຈະຢູ່ກັບໂມອັບ ທີ່ເປັນສະມາຊິກຂອງຊົນເຜົ່າຕ່າງຊາດທີ່ບໍ່ແມ່ນຊາວຢິວ. ເນື່ອງຈາກເຮົາບໍ່ໄດ້ສ້າງສັນຍາກັບພວກເຈົ້າ, ແຕ່ພຽງປະຕິບັດພາລະກິດ, ກ່າວໃນທ່າມກາງພວກເຈົ້າ ແລະ ນຳພາພວກເຈົ້າເທົ່ານັ້ນ. ເລືອດຂອງເຮົາບໍ່ໄດ້ລັ່ງອອກມາເພື່ອພວກເຈົ້າ; ເຮົາພຽງດຳເນີນພາລະກິດໃນທ່າມກາງພວກເຈົ້າ ເພື່ອຄຳພະຍານຂອງເຮົາເທົ່ານັ້ນ. ພວກເຈົ້າບໍ່ຮູ້ສິ່ງນີ້ບໍ? ພາລະກິດຂອງເຮົາຄືກັນກັບການຫຼັ່ງເລືອດຂອງພຣະເຢຊູຈົນຕາຍແທນພວກເຈົ້າແທ້ບໍ? ມັນບໍ່ຄຸ້ມຄ່າເລີຍ ທີ່ເຮົາຕ້ອງອົດທົນຕໍ່ຄວາມອັບອາຍທີ່ຍິ່ງໃຫຍ່ເຊັ່ນນັ້ນເພື່ອພວກເຈົ້າ. ພຣະເຈົ້າທີ່ບໍ່ມີບາບຢ່າງແທ້ຈິງ ແມ່ນໄດ້ມາສະຖານທີ່ ທີ່ເປັນຕາລັງກຽດ ແລະ ຂີ້ດຽດທີ່ສຸດ ເຊິ່ງເປັນໂລກຂອງໝູ ແລະ ໝາທີ່ບໍ່ເໝາະສົມສຳລັບບ່ອນຢູ່ຂອງມະນຸດ. ແຕ່ເຖິງຢ່າງນັ້ນກໍຕາມ, ເຮົາຍັງອົດທົນຕໍ່ຄວາມອັບອາຍທີ່ໂຫດຮ້າຍ ເພື່ອລັດສະໝີຂອງພຣະບິດາຂອງເຮົາ ແລະ ເພື່ອຄຳພະຍານທີ່ເປັນນິດນິລັນຂອງເຮົາ. ພວກເຈົ້າຄວນຮູ້ຈັກການປະພຶດຂອງພວກເຈົ້າ ແລະ ເບິ່ງວ່າ ພວກເຈົ້າບໍ່ແມ່ນເດັກນ້ອຍທີ່ເກີດໃໝ່ໃນ "ຄອບຄົວທີ່ຮັ່ງມີ ແລະ ມີອຳນາດ" ແຕ່ເປັນພຽງລູກຫຼານທີ່ທຸກຍາກຂອງຊາຕານ. ພວກເຈົ້າບໍ່ແມ່ນຫົວໜ້າຂອງມະນຸດ ຫຼື ພວກເຈົ້າມີສິດທິ ຫຼື ສິດເສລີພາບ. ຕັ້ງແຕ່ເດີມພວກເຈົ້າບໍ່ໄດ້ມີສ່ວນແບ່ງໃດໆໃນການໄດ້ຮັບພອນຈາກມວນມະນຸດ ຫຼື ອານາຈັກແຫ່ງສະຫວັນ.

ນີ້ກໍເພາະວ່າ ພວກເຈົ້າແມ່ນຢູ່ຊັ້ນລຸ່ມສຸດຂອງມະນຸດ ແລະ ເຮົາບໍ່ເຄີຍຄິດເຖິງເລື່ອງອະນາຄົດຂອງພວກເຈົ້າເລີຍ. ເພາະສະນັ້ນ, ເຖິງວ່າ ມັນຈະເປັນສ່ວນໜຶ່ງຂອງແຜນການຂອງເຮົາໃນປັດຈຸບັນ ເຮົາໄດ້ມີຄວາມໝັ້ນໃຈໃນການເຮັດໃຫ້ພວກເຈົ້າສົມບູນ ແຕ່ນີ້ແມ່ນວຽກງານທີ່ບໍ່ເຄີຍມີມາກ່ອນ ເພາະສະຖານະຂອງພວກເຈົ້າແມ່ນຕໍ່າຕ້ອຍຫຼາຍ ແລະ ພວກເຈົ້າບໍ່ມີສ່ວນແບ່ງໃນມວນມະນຸດມາແຕ່ດັ່ງເດີມ. ນີ້ບໍ່ແມ່ນເປັນການໃຫ້ພອນແກ່ມະນຸດບໍ?

ຜູ້ທີ່ເຮົາຊ່ວຍໃຫ້ລອດພົ້ນຄືວິຍານທີ່ເຮົາໄດ້ປົດປ່ອຍອອກຈາກສະຖານທີ່ລ້າງບາບແຕ່ດົນນານແລ້ວ ພ້ອມນັ້ນກໍຄືຜູ້ທີ່ຖືກເລືອກ ທີ່ເຮົາໄດ້ຢ້ຽມຢາມຕັ້ງແຕ່ດົນ ເນື່ອງຈາກວ່າ ພວກເຂົາປາດຖະໜາໃຫ້ເຮົາປາກົດຕົວອີກຄັ້ງໃນທ່າມກາງພວກເຂົາ. ພວກເຂົາໄດ້ຮັກເຮົາ ແລະ ໄດ້ຈາລຶກສັນຍາຂອງເຮົາທີ່ເຮົາໄດ້ສ້າງຂຶ້ນດ້ວຍເລືອດໃນຫົວໃຈຂອງພວກເຂົາ ເພາະວ່າ ເຮົາໄດ້ຮັກພວກເຂົາ. ພວກເຂົາຄືກັນກັບແກະທີ່ຫຼົງທາງ ທີ່ໄດ້ຊອກຫາເຮົາເປັນເວລາຫຼາຍປີ ແລະ ພວກເຂົາແມ່ນຄົນດີ; ເພາະສະນັ້ນເຮົາຈຶ່ງເອີ້ນພວກເຂົາວ່າ ຊາວອິດສະຣາເອນທີ່ດີ ແລະ ນາງຟ້ານ້ອຍທີ່ໜ້າຮັກ. ເຮົາຈະບໍ່ທົນທຸກກັບຄວາມອັບອາຍດັ່ງກ່າວ ຖ້າເຮົາຢູ່ໃນທ່າມກາງພວກເຂົາ. ນັ້ນກໍເພາະວ່າ ພວກເຂົາຮັກເຮົາຫຼາຍກວ່າທີ່ພວກເຂົາຮັກຊີວິດຂອງຕົວເອງ ແລະ ເຮົາກໍຮັກພວກເຂົາຄືກັບສິ່ງທີ່ສວຍງາມທີ່ສຸດໃນບັນດາທຸກສິ່ງ. ນັ້ນກໍເພາະວ່າ ພວກເຂົາຖືກເຮົາສ້າງຂຶ້ນ ແລະ ເປັນຂອງເຮົາ; ພວກເຂົາບໍ່ເຄີຍລືມເຮົາ. ຄວາມຮັກຂອງພວກເຂົາແມ່ນເໜືອກວ່າຄວາມຮັກຂອງພວກເຈົ້າ ແລະ ພວກເຂົາຮັກເຮົາຫຼາຍກວ່າທີ່ພວກເຈົ້າຮັກຊີວິດຂອງຕົວເອງ. ພວກເຂົາອ່ອນນ້ອມຕໍ່ເຮົາ ຄືກັນກັບນົກເຂົາສີຂາວໂຕນ້ອຍໆທີ່ອ່ອນນ້ອມຕໍ່ທ້ອງຟ້າ ແລະ ໃນຫົວໃຈຂອງພວກເຂົາກໍເຊື່ອຟັງເຮົາຫຼາຍກວ່າໃນຫົວໃຈຂອງພວກເຈົ້າ. ນັ້ນກໍເພາະວ່າ ພວກເຂົາແມ່ນລູກຫຼານຂອງຢາໂຄບ, ເປັນລູກຫຼານຂອງອາດາມ ແລະ ຢູ່ໃນທ່າມກາງຂອງຜູ້ຄົນທີ່ເຮົາເລືອກ, ເພາະວ່າ ເຮົາຮັກພວກເຂົາເປັນເວລາດົນນານ ແລະ ຍິ່ງຮັກພວກເຂົາຫຼາຍກວ່າຮັກພວກເຈົ້າອີກ; ນັ້ນກໍເພາະວ່າ ພວກເຈົ້າມີຄວາມກະບົດຫຼາຍ, ພວກເຈົ້າມີຄວາມຕໍ່ຕ້ານຢ່າງຮ້າຍແຮງຫຼາຍ, ພວກເຈົ້າດູຖູກເຮົາຫຼາຍເກີນໄປ, ພວກເຈົ້າເຢັນຊາກັບເຮົາຫຼາຍເກີນໄປ, ພວກເຈົ້າຮັກເຮົາໜ້ອຍຫຼາຍ ແລະ ກຽດຊັງເຮົາຫຼາຍເກີນໄປ. ພວກເຈົ້າດູຖູກພາລະກິດຂອງເຮົາ ແລະ ກຽດຊັງການກະທຳຂອງເຮົາຫຼາຍເກີນໄປ. ບໍ່ຄືພວກເຂົາ ພວກເຈົ້າບໍ່ເຄີຍເຫັນຄຸນຄ່າການກະທຳຂອງເຮົາ. ກົງກັນຂ້າມ, ພວກເຈົ້າກຽດຊັງພວກເຂົາ, ຕາຂອງພວກເຈົ້າເປັນສີແດງທີ່ເຕັມໄປດ້ວຍຄວາມຮ້ອນຮົນຄືດັ່ງຊາຕານ. ການຍອມເຊື່ອຟັງຂອງພວກເຈົ້າຢູ່ໃສ? ບຸກຄະລິກຂອງພວກເຈົ້າຢູ່ໃສ? ຄວາມຮັກຂອງພວກເຈົ້າຢູ່ໃສ? ພວກເຈົ້າໄດ້ສະແດງໃຫ້ເຫັນອົງປະກອບຂອງຄວາມຮັກໃນຕົວພວກເຈົ້າເມື່ອໃດ? ພວກເຈົ້າຖືເອົາພຣະທຳຂອງເຮົາດ້ວຍຄວາມຈິງໃຈຕອນໃດ? ໜ້າສົງສານຝູງນາງຟ້າທີ່ໜ້າຮັກເຫຼົ່ານັ້ນ ທີ່ຄອງຄອຍການກັບມາຂອງເຮົາຢ່າງຮ້ອນໃຈ ແລະ ທົນທຸກຢ່າງໃຫຍ່ຫຼວງ ໃນຂະນະທີ່ລໍຖ້າເຮົາຢ່າງຮ້ອນຮົນໃຈ ຍ້ອນວ່າເຮົາຮັກພວກເຂົາຢ່າງສຸດໃຈ. ຢ່າງໃດກໍຕາມ, ສິ່ງທີ່ເຮົາເຫັນໃນປັດຈຸບັນແມ່ນບໍ່ຄືໂລກມະນຸດ ທີ່ບໍ່ມີຫຍັງກ່ຽວຂ້ອງກັບພວກເຂົາ. ພວກເຈົ້າບໍ່ຄິດວ່າ ສາມັນສຳນຶກຂອງພວກເຈົ້າໄດ້ຕາຍດ້ານ ແລະ ປາສະຈາກຄວາມຮູ້ສຶກແຕ່ດົນນານແລ້ວບໍ? ພວກເຈົ້າບໍ່ຄິດວ່າ ພວກເຈົ້າແມ່ນຄົນຕໍ່າຊ້າ ທີ່ຂັດຂວາງ

ການພົບປະຂອງເຮົາກັບນາງຟ້າທີ່ໜ້າຮັກອີກຄັ້ງບໍ? ໃນເວລາໃດທີ່ພວກເຂົາບໍ່ໄດ້ລໍຖ້າການກັບມາຂອງເຮົາ? ໃນເວລາໃດທີ່ພວກເຂົາບໍ່ໄດ້ລໍຖ້າທີ່ຈະມາຢູ່ຮ່ວມກັນກັບເຮົາອີກ? ໃນເວລາໃດທີ່ພວກເຂົາບໍ່ໄດ້ຄອງຄອຍເພື່ອໃຊ້ເວລາຂອງມື້ທີ່ງົດງາມຢູ່ຮ່ວມກັນກັບເຮົາ ແລະ ຮັບປະທານອາຫານກັບເຮົາ? ພວກເຈົ້າເຄີຍຮູ້ສຶກຕົວໃນສິ່ງທີ່ພວກເຈົ້າເຮັດໃນປັດຈຸບັນນີ້ບໍ່: ອາລະວາດໄປທົ່ວໂລກ, ວາງແຜນລໍ້ລວງຕໍ່ກັນ, ຫຼອກລວງເຊິ່ງກັນແລະກັນ, ປະພຶດຕົນຢ່າງອັກກະຕັນຍູ, ມີຄວາມລັບ ແລະ ບໍ່ມີຢາງອາຍ; ບໍ່ຮູ້ຈັກຄວາມຈິງ, ປະພຶດດ້ວຍການສໍ້ໂກງ ແລະ ຫຼອກລວງ, ເຮັດປະຈົບປະແຈງ, ຖືຕົນເອງວ່າຖືກຕ້ອງ ແລະ ດີກວ່າຜູ້ອື່ນສະເໝີ; ອວດດີ ແລະ ປະຕິບັດຢ່າງປ່າເຖື່ອນຄືກັບສັດຮ້າຍທີ່ຢູ່ໃນພູເຂົາ ແລະ ໂຫດຮ້າຍຄືກັບກະສັດແຫ່ງສັດຮ້າຍ. ຄວາມປະພຶດເຫຼົ່ານີ້ແມ່ນເໝາະສົມກັບມະນຸດບໍ? ພວກເຈົ້າບໍ່ສຸພາບ ແລະ ບໍ່ມີເຫດຜົນ. ພວກເຈົ້າບໍ່ເຄີຍເຫັນຄຸນຄ່າພຣະທຳຂອງເຮົາ, ແຕ່ກົງກັນຂ້າມ ພວກເຈົ້າມີທັດສະນະຄະຕິດູຖູກພຣະທຳເຫຼົ່ານັ້ນ. ເມື່ອເປັນເຊັ່ນນີ້ ຜົນສຳເລັດ, ຊີວິດມະນຸດທີ່ແທ້ຈິງ ແລະ ຄວາມຫວັງທີ່ສວຍງາມຈະມາຈາກໃສ? ຈິນຕະການທີ່ເກີນຂອບເຂດຂອງພວກເຈົ້າຈະຊ່ວຍພວກເຈົ້າຫຼຸດພົ້ນຈາກປາກຂອງເສືອໄດ້ແທ້ບໍ? ມັນຈະຊ່ວຍພວກເຈົ້າໃຫ້ລອດພົ້ນອອກຈາກແປວໄຟທີ່ເຜົາໄໝ້ໄດ້ແທ້ບໍ? ພວກເຈົ້າຈະຕົກຢູ່ໃນຈຸດນີ້ບໍ ຖ້າພວກເຈົ້າຖືເອົາພຣະທຳຂອງເຮົາເປັນສົມບັດທີ່ລໍ້າຄ່າແທ້ຈິງ? ມັນສາມາດເປັນໄປໄດ້ບໍ ທີ່ຄວາມຈິງແລ້ວ ຊາຕາກຳຂອງພວກເຈົ້ານັ້ນບໍ່ສາມາດຖືກປ່ຽນແປງໄດ້? ພວກເຈົ້າເຕັມໃຈທີ່ຈະຕາຍພ້ອມກັບຄວາມເສຍໃຈດັ່ງກ່າວບໍ?

# ຕົວຕົນໂດຍທຳມະຊາດຂອງມະນຸດ ແລະ ຄຸນຄ່າຂອງ ພວກເຂົາ: ພວກເຂົາເປັນແບບໃດກັນແທ້?

ພວກເຈົ້າຖືກແຍກອອກຈາກຕົມ ແລະ ບໍ່ວ່າຫຍັງກໍຕາມ ພວກເຈົ້າແມ່ນສິ່ງ ທີ່ຖືກເລືອກຈາກສິ່ງເສດເຫຼືອ, ເປັນສິ່ງສົກກະປົກ ແລະ ເປັນສິ່ງທີ່ພຣະເຈົ້າກຽດຊັງ. ພວກເຈົ້າເປັນຂອງຊາຕານ ແລະ ເຄີຍຖືກມັນຢຽບຢໍ່າ ແລະ ເຮັດໃຫ້ມົມົນທິນ. ນັ້ນຄືເຫດຜົນທີ່ເວົ້າວ່າ ພວກເຈົ້າຖືກແຍກອອກຈາກຕົມ ແລະ ນອກຈາກຈະຫ່າງໄກຈາກຄວາມບໍລິສຸດແລ້ວ, ໃນທາງກົງກັນຂ້າມ ພວກເຈົ້າຄືສິ່ງທີ່ບໍ່ແມ່ນມະນຸດເຊິ່ງໄດ້ກາຍເປັນເປົ້າໝາຍໃຫ້ຊາຕານຫຼອກລວງຕັ້ງແຕ່ດົນແລ້ວ. ນີ້ແມ່ນການປະເມີນທີ່ເໝາະສົມກ່ຽວກັບພວກເຈົ້າ. ພວກເຈົ້າຕ້ອງຮູ້ວ່າ ໂດຍເດີມແລ້ວ ພວກເຈົ້າແມ່ນສິ່ງທີ່ບໍ່ບໍລິສຸດ ທີ່ພົບເຫັນໃນນໍ້າເປື້ອນ ແລະ ຕົມ ເຊິ່ງກົງກັນຂ້າມກັບສິ່ງທີ່ເປັນຕາປາດຖະໜາ ເຊັ່ນ: ປາ ແລະ ກຸ້ງ ເນື່ອງຈາກວ່າບໍ່ຄວາມສຸກໃດໆມາຈາກຕົວພວກເຈົ້າເລີຍ. ຖ້າໃຫ້ເວົ້າແບບກົງໄປກົງມາ ພວກເຈົ້າກໍແມ່ນສັດຮ້າຍທີ່ມີຄຸນຄ່າຕໍ່າຂອງສັງຄົມທີ່ຕໍ່າຕ້ອຍ, ຮ້າຍແຮງກວ່າໝູ ແລະ ໝາ. ເວົ້າຕາມກົງກໍຄືການຈະເວົ້າເຖິງພວກເຈົ້າໂດຍໃຊ້ຖ້ອຍຄຳດັ່ງກ່າວນັ້ນບໍ່ແມ່ນການເວົ້າທີ່ເກີນຄວາມຈິງ ຫຼື ເປັນການເວົ້າທີ່ເກີນເຫດຜົນ; ກົງກັນຂ້າມ ແຕ່ມັນແມ່ນວິທີເພື່ອເຮັດໃຫ້ບັນຫາງ່າຍຂຶ້ນ. ຍິ່ງສາມາດເວົ້າໄດ້ວ່າ ການເວົ້າເຖິງພວກເຈົ້າໂດຍໃຊ້ຖ້ອຍຄຳດັ່ງກ່າວແມ່ນວິທີສະແດງຄວາມເຄົາລົບຕໍ່ພວກເຈົ້າ. ຄວາມເຂົ້າໃຈຂອງພວກເຈົ້າ, ຖ້ອຍຄຳ, ພຶດຕິກຳແບບມະນຸດ ແລະ ທຸກລັກສະນະໃນຊີວິດຂອງພວກເຈົ້າ ເຊິ່ງລວມທັງສະຖານະຂອງພວກເຈົ້າທີ່ຢູ່ໃນຕົມ ແມ່ນພຽງພໍທີ່ຈະພິສູດວ່າ ຕົວຕົນຂອງພວກເຈົ້າແມ່ນ "ບໍ່ປົກກະຕິ".

# ຜູ້ທີ່ບໍ່ຮຽນຮູ້ ແລະ ຍັງຄົງໂງ່ຈ້າ: ພວກເຂົາບໍ່ແມ່ນສັດຮ້າຍບໍ?

ໃນຂະນະທີ່ເຈົ້າຍ່າງຢູ່ເສັ້ນທາງຂອງປັດຈຸບັນ, ການສະແຫວງຫາປະເພດໃດແມ່ນເໝາະສົມທີ່ສຸດ? ໃນການສະແຫວງຫາຂອງເຈົ້າ, ຄົນປະເພດໃດທີ່ເຈົ້າເຫັນວ່າ ຕົວເອງຄວນເປັນ? ມັນຈຳເປັນສຳລັບເຈົ້າທີ່ຈະຮູ້ຈັກວິທີທີ່ເຈົ້າຄວນເຂົ້າຫາທຸກສິ່ງທີ່ເກີດຂຶ້ນກັບເຈົ້າໃນປັດຈຸບັນ, ບໍ່ວ່າຈະແມ່ນການທົດລອງ ຫຼື ຄວາມລຳບາກ ຫຼື ການຂ້ຽນຕີຢ່າງໄຮ້ປານີ ແລະ ການສາບແຊ່ງ. ເມື່ອຜະເຊີນກັບທຸກສິ່ງເຫຼົ່ານີ້, ເຈົ້າກໍຄວນໄຕ່ຕອງພວກມັນຢ່າງລະມັດລະວັງໃນທຸກກໍລະນີ. ເປັນຫຍັງເຮົາຈຶ່ງກ່າວສິ່ງນີ້? ບໍ່ວ່າຢ່າງໃດກໍຕາມ, ເຮົາກ່າວມັນກໍຍ້ອນວ່າ ສິ່ງຕ່າງໆທີ່ເກີດຂຶ້ນກັບເຈົ້າໃນປັດຈຸບັນ ແມ່ນການທົດລອງໃນໄລຍະສັ້ນ ເຊິ່ງເກີດຂຶ້ນຊ້ຳແລ້ວຊ້ຳອີກ; ບາງເທື່ອ ເທົ່າທີ່ເຈົ້າຮູ້, ສິ່ງເຫຼົ່ານັ້ນແມ່ນບໍ່ຫຍຸ້ງຍາກຕໍ່ຈິດໃຈໂດຍສະເພາະ ແລະ ດ້ວຍເຫດນັ້ນ ເຈົ້າຈຶ່ງປ່ອຍໃຫ້ສິ່ງຕ່າງໆລ່ອງລອຍໄປຕາມເສັ້ນທາງທຳມະຊາດຂອງສິ່ງເຫຼົ່ານັ້ນ ແລະ ບໍ່ຖືວ່າ ສິ່ງເຫຼົ່ານັ້ນແມ່ນຊັບສົມບັດທີ່ມີຄ່າໃນການສະແຫວງຫາຄວາມກ້າວໜ້າ. ເຈົ້າຈັ່ງແມ່ນບໍ່ມີຄວາມຄິດ! ບໍ່ມີຄວາມຄິດຫຼາຍຈົນເຈົ້າຄິດວ່າ ຊັບສົມບັດທີ່ມີຄ່ານີ້ເປັນຄືກັບກ້ອນເມກທີ່ລ່ອງລອຍຢູ່ຕໍ່ໜ້າເຈົ້າ ແລະ ເຈົ້າບໍ່ຖືເອົາການໂຈມຕີທີ່ຮຸນແຮງເຫຼົ່ານີ້ເປັນສິ່ງມີຄ່າເຊິ່ງຕົກລົງໃສ່ເຈົ້າຊ້ຳແລ້ວຊ້ຳອີກ, ກໍຄືການໂຈມຕີທີ່ສັ້ນ ແລະ ເປັນສິ່ງທີ່ມີນ້ຳໜັກໜ້ອຍດຽວສຳລັບເຈົ້າ ແຕ່ເຈົ້າຜັດເບິ່ງສິ່ງເຫຼົ່ານັ້ນດ້ວຍການແຍກຕົວອອກຢ່າງເຢືອກເຢັນ, ບໍ່ໃສ່ໃຈກັບສິ່ງເຫຼົ່ານັ້ນ ແລະ ປະຕິບັດຕໍ່ສິ່ງເຫຼົ່ານັ້ນເປັນພຽງໂອກາດທີ່ເສຍໄປ. ເຈົ້າຈັ່ງແມ່ນອວດດີ! ຕໍ່ການໂຈມຕີທີ່ໂຫດຮ້າຍເຫຼົ່ານີ້, ການໂຈມຕີທີ່ຄ້າຍກັບພາຍຸ ທີ່ມາຢ່າງຊ້ຳແລ້ວຊ້ຳອີກ, ເຈົ້າກໍມີແຕ່ສະແດງຄວາມບໍ່ສົນໃຈຕໍ່ສິ່ງນັ້ນ; ບາງຄັ້ງເຈົ້າເຖິງກັບມີຮອຍຍິ້ມທີ່ເຢືອກເຢັນ ໂດຍເປີດໂປງສີໜ້າທີ່ບໍ່ສົນໃຈຢ່າງສິ້ນເຊີງ ເພາະວ່າ ເຈົ້າບໍ່ເຄີຍຄິດກັບຕົວເອງວ່າ ເປັນຫຍັງເຈົ້າຈຶ່ງທົນທຸກກັບ "ຄວາມໂຊກຮ້າຍ" ດັ່ງກ່າວ. ເປັນໄປໄດ້ບໍ ທີ່ເຮົາບໍ່ຍຸຕິທຳຕໍ່ມະນຸດຂະໜາດນັ້ນ? ເຮົາເຮັດໃຫ້ມັນເປັນວຽກຂອງເຮົາບໍເພື່ອຊອກຫາຂໍ້ບົກຜ່ອງໃນຕົວເຈົ້າ? ເຖິງວ່າ ບັນຫາດ້ານຄວາມຄິດຂອງເຈົ້າອາດບໍ່ຮ້າຍແຮງຕາມທີ່ເຮົາໄດ້ພັນລະນາ ແຕ່ຜ່ານຄວາມສະຫງົບພາຍນອກຂອງເຈົ້າ, ເຈົ້າໄດ້ແຕ້ມຮູບພາບຂອງໂລກພາຍໃນຂອງເຈົ້າແຕ່ດົນນານແລ້ວ. ບໍ່ຈຳເປັນຕ້ອງໃຫ້ເຮົາບອກເຈົ້າວ່າ ສິ່ງດຽວທີ່ເຊື່ອງຢູ່ໃນສ່ວນເລິກຂອງຫົວໃຈເຈົ້າແມ່ນຄຳປະນາມທີ່ຮ້າຍແຮງ ແລະ ຮ່ອງຮອຍບາງຢ່າງຂອງຄວາມໂສກເສົ້າທີ່ຄົນອື່ນເກືອບບໍ່ສາມາດແຍກແຍະອອກໄດ້. ຍ້ອນເຈົ້າຮູ້ສຶກວ່າ ມັນບໍ່ຍຸຕິທຳຫຼາຍທີ່ຈະທົນທຸກກັບການທົດລອງດັ່ງກ່າວ ເຈົ້າຈຶ່ງສາບແຊ່ງ; ແລະ ຍ້ອນການທົດລອງເຫຼົ່ານີ້ເຮັດໃຫ້ເຈົ້າຮູ້ສຶກເຖິງຄວາມໂດດດ່ຽວຂອງໂລກ ເຈົ້າຈຶ່ງເຕັມໄປດ້ວຍຄວາມໂສກເສົ້າ. ເຈົ້າບໍ່ພຽງແຕ່ບໍ່ເບິ່ງການໂຈມຕີ ແລະ ການກະທຳທາງວິໄນເຫຼົ່ານີ້ຊ້ຳແລ້ວຊ້ຳອີກວ່າ ເປັນການປົກປ້ອງທີ່ດີທີ່ສຸດ, ເຈົ້າຍັງເຫັນວ່າ ສິ່ງເຫຼົ່ານັ້ນເປັນການສ້າງຄວາມວຸ້ນວາຍຢ່າງໄຮ້ຄວາມຄິດຂອງສະຫວັນ ຫຼື ບໍ່ດັ່ງນັ້ນ ກໍເປັນຜົນກຳສະໜອງທີ່ເໝາະສົມສຳລັບເຈົ້າ. ເຈົ້າຈັ່ງແມ່ນໂງ່ຈ້າຫຼາຍ! ເຈົ້າຈຳກັດຂອບເຂດເວລາທີ່ດີໄວ້ຢູ່ໃນຄວາມມືດຢ່າງໄຮ້ຄວາມເມດຕາ;

ເຈົ້າເຫັນການທົດລອງ ແລະ ການກະທຳທາງວິໄນທີ່ມະຫັດສະຈັນເປັນການໂຈມຕີຈາກສັດຕູຂອງເຈົ້າ ຢ່າງຊ້ຳແລ້ວຊ້ຳອີກ. ເຈົ້າບໍ່ຮູ້ຈັກວິທີປັບຕົວເຂົ້າກັບສະພາບແວດລ້ອມຂອງເຈົ້າ ແລະ ເຈົ້າເຖິງກັບບໍ່ເຕັມໃຈທີ່ຈະພະຍາຍາມເຮັດເຊັ່ນນັ້ນ ເພາະວ່າ ສຳລັບເຈົ້າແລ້ວ ເຈົ້າບໍ່ເຕັມໃຈທີ່ຈະຮັບເອົາສິ່ງໃດໆ ຈາກການຂ້ຽນຕີທີ່ໂຫດຮ້າຍ ແລະ ຕະຫຼອດເວລານີ້. ເຈົ້າບໍ່ພະຍາຍາມຊອກຫາ ຫຼື ສຳຫຼວດຫາ ແລະ ພຽງແຕ່ຍອມຮັບຊະຕາກຳຂອງຕົວເອງ ແລະ ຍອມໄປບ່ອນໃດກໍຕາມທີ່ມັນນຳພາເຈົ້າໄປ. ສິ່ງທີ່ເຈົ້າອາດເບິ່ງຄືກັບວ່າ ເປັນການກະທຳຈາກການຂ້ຽນຕີທີ່ປ່າເຖື່ອນແມ່ນບໍ່ໄດ້ປ່ຽນແປງຫົວໃຈຂອງເຈົ້າ ແລະ ສິ່ງເຫຼົ່ານັ້ນບໍ່ໄດ້ຄວບຄຸມຫົວໃຈຂອງເຈົ້າ; ກົງກັນຂ້າມ, ສິ່ງເຫຼົ່ານັ້ນແມ່ນແທງຫົວໃຈຂອງເຈົ້າ. ເຈົ້າເຫັນ "ການຂ້ຽນຕີທີ່ໂຫດຮ້າຍ" ນີ້ເປັນພຽງສັດຕູໃນຊີວິດນີ້ເທົ່ານັ້ນ ແລະ ດ້ວຍເຫດນັ້ນ ເຈົ້າບໍ່ໄດ້ຮັບຫຍັງເລີຍ. ເຈົ້າຄິດວ່າຕົວເອງເປັນຝ່າຍຖືກທີ່ສຸດ! ມີໜ້ອຍຄັ້ງທີ່ເຈົ້າເຊື່ອວ່າ ເຈົ້າທົນທຸກກັບການທົດລອງດັ່ງກ່າວຍ້ອນການໝິ່ນປະໝາດຂອງຕົວເຈົ້າເອງ; ກົງກັນຂ້າມ, ເຈົ້າຖືວ່າ ຕົວເອງໂຊກຮ້າຍ ເຊິ່ງຍິ່ງໄປກວ່ານັ້ນ ກໍເວົ້າວ່າ ເຮົາຊອກຫາຈັບຜິດເຈົ້າຕະຫຼອດ. ແລ້ວຕອນນີ້ ສິ່ງຕ່າງໆກໍໄດ້ມາຮອດທາງຜ່ານນີ້ແລ້ວ, ເຈົ້າຮູ້ຈັກສິ່ງທີ່ເຮົາກ່າວ ແລະ ປະຕິບັດແທ້ຫຼາຍສໍ່າໃດ? ຈົ່ງຢ່າຄິດວ່າ ເຈົ້າແມ່ນອັດສະລິຍະຕັ້ງແຕ່ເກີດ ທີ່ຕໍ່າກວ່າສະຫວັນໜ້ອຍໜຶ່ງ ແຕ່ສູງກວ່າແຜ່ນດິນໂລກຫຼາຍ. ເຈົ້າບໍ່ໄດ້ສະຫຼາດໄປກວ່າຄົນອື່ນ ແລະ ສາມາດເວົ້າໄດ້ວ່າ ມັນເປັນພຽງສິ່ງທີ່ໜ້າຮັກເທົ່ານັ້ນ ທີ່ເຈົ້າບ້າຫຼາຍສໍ່າໃດໄປກວ່າຄົນຢູ່ເທິງແຜ່ນດິນໂລກທີ່ມີເຫດຜົນ ເພາະວ່າ ເຈົ້າຄິດວ່າ ຕົວເອງສູງສົ່ງຫຼາຍ ແລະ ບໍ່ເຄີຍມີຄວາມຮູ້ສຶກດ້ອຍ ຄືກັບວ່າ ເຈົ້າສາມາດເຫັນທະລຸການກະທຳຂອງເຮົາຢ່າງລາຍລະອຽດທີ່ສຸດ. ທີ່ຈິງແລ້ວ, ເຈົ້າແມ່ນຄົນທີ່ຂາດເຫດຜົນຫຼາຍ ຍ້ອນວ່າ ເຈົ້າບໍ່ມີຄວາມຄິດ ກ່ຽວກັບສິ່ງທີ່ເຮົາຕ້ອງການປະຕິບັດ ແລະ ເຈົ້າເຖິງກັບບໍ່ຮູ້ສຶກເຖິງສິ່ງທີ່ເຮົາກຳລັງປະຕິບັດໃນຕອນນີ້. ສະນັ້ນ ເຮົາຈຶ່ງກ່າວວ່າ ເຈົ້າແມ່ນບໍ່ສາມາດປຽບທຽບແມ່ນແຕ່ກັບຊາວນາເຖົ້າ ທີ່ເຮັດວຽກໜັກ, ເຊິ່ງເປັນຊາວນາທີ່ບໍ່ມີຄວາມເຂົ້າໃຈກ່ຽວກັບຊີວິດມະນຸດແມ່ນແຕ່ໜ້ອຍດຽວ ແຕ່ຍັງມອບຄວາມໄວ້ວາງໃຈທັງໝົດຂອງລາວໄວ້ກັບພອນຂອງສະຫວັນ ໃນຂະນະທີ່ລາວປູກຝັງຢູ່ໃນດິນ. ເຈົ້າບໍ່ຄິດກ່ຽວກັບຊີວິດຂອງເຈົ້າເລີຍ, ເຈົ້າບໍ່ຮູ້ຈັກສິ່ງທີ່ມີຊື່ສຽງ ແລ້ວແຮງໄກທີ່ເຈົ້າຈະມີຄວາມຮູ້ກ່ຽວກັບຕົວເອງ. ເຈົ້າຈັ່ງແມ່ນ "ເໜືອທຸກສິ່ງ"! ແທ້ຈິງແລ້ວ ເຮົາເປັນຫ່ວງຜູ້ຊາຍເຈົ້າສູ້ທີ່ມັກແຕ່ງຕົວໂກ້ແບບເຈົ້າ ແລະ ຜູ້ສາວໂສດທີ່ສວຍງາມແບບເຈົ້າ: ພວກເຈົ້າຈະສາມາດຢືນທົນຕໍ່ການໂຈມຕີຂອງພາຍຸທີ່ໃຫຍ່ກວ່ານີ້ໄດ້ແນວໃດ? ຜູ້ຊາຍເຈົ້າສູ້ເຫຼົ່ານີ້ແມ່ນບໍ່ສົນໃຈຢ່າງສິ້ນເຊີງຕໍ່ກັບສະຖານະການທີ່ລຳບາກ ທີ່ພວກເຂົາເອງຜະເຊີນຢູ່. ສຳລັບພວກເຂົາແລ້ວ, ນີ້ປາກົດວ່າ ເປັນເລື່ອງທີ່ບໍ່ສຳຄັນ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ຄິດຫຍັງກັບມັນ ໂດຍທີ່ບໍ່ຮູ້ສຶກເຖິງດ້ານລົບ ແລະ ບໍ່ຄິດວ່າຕົວເອງຕ້ອຍຕໍ່າ; ກົງກັນຂ້າມ, ພວກເຂົາສືບຕໍ່, ດັ່ງທີ່ຜ່ານມາ ເລາະຫຼິ້ນໃນຖະໜົນໂດຍພັດວີຂອງພວກເຂົາຄ່ອຍໆ. "ຜູ້ຄົນສຳຄັນ" ເຫຼົ່ານີ້ ທີ່ບໍ່ໄດ້ຮຽນຮູ້ ແລະ ຍັງຄົງໂງ່ຈ້າແມ່ນບໍ່ຮູ້ເລີຍວ່າ ເປັນຫຍັງຢູ່ເທິງແຜ່ນດິນໂລກ ເຮົາຈຶ່ງກ່າວສິ່ງດັ່ງກ່າວກັບພວກເຂົາ; ໜ້າຂອງພວກເຂົາແມ່ນເຕັມໄປດ້ວຍຄວາມລຳຄານ, ພວກເຂົາພຽງແຕ່ກວດສອບຕົວເອງແບບທຳມະດາ ແລະ ຫຼັງຈາກນັ້ນກໍສືບຕໍ່ໂດຍບໍ່ໄດ້ມີການປ່ຽນແປງແນວທາງທີ່ຊົ່ວຮ້າຍຂອງພວກເຂົາເລີຍ;

ເມື່ອພວກເຂົາຈາກເຮົາໄປ, ພວກເຂົາກໍເລີ່ມແລ່ນອາລະວາດໃນໂລກອີກຄັ້ງ ໂດຍຍ່າງວາງທ່າ ແລະ ເລີ່ມສໍ້ໂກງອີກເທື່ອໜຶ່ງ. ສີໜ້າຂອງເຈົ້າຈັ່ງແມ່ນປ່ຽນໄວ. ແລ້ວເຈົ້າກໍພະຍາຍາມຫຼອກລວງເຮົາດ້ວຍວິທີນີ້ອີກຄັ້ງ. ຈັ່ງແມ່ນເຈົ້າກ້າ! ຜູ້ສາວນ້ອຍທີ່ສວຍງາມເຫຼົ່ານັ້ນແມ່ນຍິ່ງເປັນຕາຫົວຂວັນ. ເມື່ອໄດ້ຍິນການກ່າວພຣະທຳຢ່າງຮີບດ່ວນຂອງເຮົາ ແລະ ເມື່ອເຫັນສະຖານະການທີ່ລຳບາກທີ່ພວກເຂົາຜະເຊີນຢູ່, ນໍ້າຕາກໍໄຫຼລົງໃນໜ້າຂອງພວກເຂົາໂດຍບໍ່ຮູ້ຕົວ, ຮ່າງກາຍຂອງພວກເຂົາບິດບ້ຽວໄປມາ ແລະ ເບິ່ງຄືວ່າ ພວກເຂົາກຳລັງສ້າງພາບ. ຈັ່ງແມ່ນເປັນຕາເບື່ອໜ່າຍເດ! ເມື່ອຮູ້ເຖິງວຸດທິພາວະຂອງພວກເຂົາເອງ, ພວກເຂົາກໍຖິ້ມໂຕລົງໃສ່ຕຽງຂອງພວກເຂົາ ແລະ ນອນຢູ່ບ່ອນນັ້ນ ໂດຍຮ້ອງໄຫ້ບໍ່ຢຸດ ເຊິ່ງເກືອບຄືກັບວ່າ ພວກເຂົາຫາຍໃຈຄັ້ງສຸດທ້າຍ. ເມື່ອພຣະທຳເຫຼົ່ານີ້ໄດ້ສະແດງໃຫ້ພວກເຂົາເຫັນເຖິງຄວາມເປັນເດັກນ້ອຍ ແລະ ຄວາມຕໍ່າຕ້ອຍຂອງພວກເຂົາເອງ, ຫຼັງຈາກນັ້ນ ພວກເຂົາກໍຖືກຄວາມບໍ່ດີເຕັງລົງໃສ່ຈົນແສງສະຫວ່າງໄດ້ດັບມອດຈາກຕາຂອງພວກເຂົາ ແລະ ພວກເຂົາກາຍເປັນຄົນພິການຢ່າງສິ້ນເຊີງໃນການບໍ່ດົ້ນຮົນຂອງພວກເຂົາ ແລະ ໃນທຳນອງດຽວກັນນັ້ນ ພວກເຂົາກໍບໍ່ສາມາດຮຽນຮູ້ ແລະ ຍັງຄົງໂງ່ຈ້າ ໂດຍທີ່ບໍ່ໄດ້ຈົ່ມວ່າກ່ຽວກັບເຮົາ ຫຼື ກຽດຊັງເຮົາເລີຍ. ຫຼັງຈາກທີ່ຈາກເຮົາໄປ, ພວກເຂົາຫຼິ້ນມ່ວນຊື່ນ ແລະ ເລາະຫຼິ້ນໄປມາ ເຊິ່ງສຽງຫົວຂອງພວກເຂົາແມ່ນຄືກັບສຽງ "ກະດິງສີນໍ້າເງິນຂອງເຈົ້າຍິງ". ພວກເຂົາຈັ່ງແມ່ນອ່ອນແອ ແລະ ຂາດຄວາມຮັກໃນຕົວເອງຫຼາຍ! ພວກເຈົ້າທຸກຄົນ ເຊິ່ງເປັນຄົນບົກຜ່ອງທີ່ຖືກປະຕິເສດຈາກມະນຸດຊາດ, ພວກເຈົ້າຈັ່ງແມ່ນຂາດຄວາມເປັນມະນຸດ! ພວກເຈົ້າບໍ່ຮູ້ຈັກວິທີຮັກຕົວເອງ ຫຼື ວິທີປົກປ້ອງຕົວເອງ, ພວກເຈົ້າບໍ່ມີຄວາມຮູ້ສຶກ, ພວກເຈົ້າບໍ່ສະແຫວງຫາແນວທາງທີ່ແທ້ຈິງ, ພວກເຈົ້າບໍ່ຮັກແສງສະຫວ່າງທີ່ແທ້ຈິງ ແລະ ຍິ່ງໄປກວ່ານັ້ນ ພວກເຈົ້າບໍ່ຮູ້ຈັກວິທີຖະໜອມຕົວເອງ. ສ່ວນການສັ່ງສອນທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າຊໍ້າແລ້ວຊໍ້າອີກ, ພວກເຈົ້າໄດ້ເຄື່ອນຍ້າຍສິ່ງເຫຼົ່ານັ້ນໄປໄວ້ຢູ່ດ້ານຫຼັງຂອງແນວຄິດຂອງພວກເຈົ້າແຕ່ດົນນານແລ້ວ ຈົນເຖິງກັບຂັ້ນປະຕິບັດຕໍ່ສິ່ງເຫຼົ່ານັ້ນເປັນຂອງຫຼິ້ນເພື່ອຂ້າເວລາວ່າງຂອງພວກເຈົ້າ. ພວກເຈົ້າຖືສິ່ງເຫຼົ່ານີ້ທັງໝົດເປັນ "ເຄື່ອງຄໍ້າຄູນ" ສ່ວນຕົວຂອງພວກເຈົ້າເອງຕະຫຼອດ. ເມື່ອຖືກຊາຕານກ່າວຫາ, ເຈົ້າກໍອະທິຖານ; ເມື່ອບໍ່ດີ, ເຈົ້າກໍນອນຫຼັບສະນິດ; ເມື່ອດີໃຈ, ເຈົ້າກໍແລ່ນໄປມາຢ່າງເບີກບານ; ເມື່ອເຮົາຕຳນິຕິຕຽນເຈົ້າ, ເຈົ້າກໍກົ້ມລົງ ແລະ ຖູໄປມາ; ແລ້ວຫຼັງຈາກນັ້ນ ທັນທີທີ່ເຈົ້າອອກໄປຈາກການສະຖິດຢູ່ຂອງເຮົາ, ເຈົ້າກໍຫົວຂ້ວນດ້ວຍຄວາມດີໃຈຢ່າງຊົ່ວຮ້າຍ. ເຈົ້າຮູ້ສຶກວ່າຕົວເອງຢູ່ເໜືອທຸກຄົນ ແຕ່ເຈົ້າບໍ່ເຄີຍເຫັນຕົວເອງເປັນຄົນໂອ້ອວດທີ່ສຸດ ແລະ ເປັນຄົນສູງສົ່ງ, ພໍໃຈໃນຕົວເອງ ແລະ ຈອງຫອງເກີນທີ່ຈະບັນຍາຍ. "ສຸພາບບຸລຸດໜຸ່ມ" ແລະ "ສະຕີໜຸ່ມ", "ຊາຍສູງສັກ" ແລະ "ຍິງສູງສັກ" ທີ່ບໍ່ຮຽນຮູ້ ແລະ ຍັງໂງ່ຈ້າ ຈະສາມາດຖືເອົາພຣະທຳຂອງເຮົາເປັນຊັບສົມບັດທີ່ມີຄ່າໄດ້ແນວໃດ? ເຮົາຂໍຖາມເຈົ້າອີກຄັ້ງ: ເຈົ້າໄດ້ຮຽນຮູ້ຫຍັງຈາກພຣະທຳຂອງເຮົາ ແລະ ພາລະກິດຂອງເຮົາໃນຊ່ວງເວລາອັນດົນນານນີ້? ເຈົ້າໄດ້ຮັບທັກສະທີ່ຍິ່ງໃຫຍ່ໃນການຫຼອກລວງຂອງເຈົ້າບໍ? ຫຼື ເຈົ້າໄດ້ມີປະສົບການໃນຊີວິດຫຼາຍໃນເນື້ອໜັງຂອງເຈົ້າ? ຫຼື ມີຄວາມບໍ່ເຄົາລົບຢ່າງໃຫຍ່ໃນທັດສະນະຄະຕິຂອງເຈົ້າທີ່ມີຕໍ່ເຮົາ? ເຮົາຂໍບອກເຈົ້າຕາມກົງວ່າ: ມັນແມ່ນພາລະກິດທັງໝົດທີ່ເຮົາໄດ້ປະຕິບັດ ທີ່ໄດ້

ເຮັດໃຫ້ເຈົ້າ ເຊິ່ງເປັນຜູ້ທີ່ເຄີຍມີຄວາມກ້າສໍ່າກັບໂຕໜູ ໃຫ້ໄດ້ມີຄວາມກ້າຫານຂຶ້ນ. ຄວາມຢຳເກງທີ່ເຈົ້າຮູ້ສຶກຕໍ່ເຮົາແມ່ນມີໜ້ອຍລົງໃນແຕ່ລະມື້ທີ່ຜ່ານໄປ ເພາະວ່າ ເຮົາມີຄວາມເມດຕາຫຼາຍ ແລະ ບໍ່ເຄີຍລົງໂທດເນື້ອໜັງຂອງເຈົ້າດ້ວຍວິທີການທີ່ຮຸນແຮງ. ຕາມທີ່ເຈົ້າເຫັນ, ບາງເທື່ອເຮົາພຽງແຕ່ກ່າວພຣະທຳທີ່ໂຫດຮ້າຍ ແຕ່ໂດຍສ່ວນໃຫຍ່ແລ້ວ ເຮົາສະແດງໃຫ້ເຈົ້າເຫັນໃບໜ້າທີ່ຍິ້ມແຍ້ມ ແລະ ເຮົາເກືອບຈະບໍ່ເຄີຍຕິຕຽນເຈົ້າຕໍ່ໜ້າເຈົ້າເລີຍ. ຍິ່ງໄປກວ່ານັ້ນ, ເຮົາໃຫ້ອະໄພຕໍ່ຄວາມອ່ອນແອຂອງເຈົ້າຕະຫຼອດ ແລະ ຍ້ອນສິ່ງນີ້ທັງໝົດ ເຈົ້າຈຶ່ງໄດ້ປະຕິບັດຕໍ່ເຮົາຄືກັນກັບທີ່ໂຕງູໄດ້ປະຕິບັດຕໍ່ຊາວນາຜູ້ໃຈດີ. ເຮົາຈັ່ງແມ່ນເຫຼື້ອມໃສລະດັບທັກສະ ແລະ ຄວາມສະຫຼາດຢ່າງສູງໃນອຳນາດແຫ່ງການສັງເກດການຂອງເຜົ່າພັນມະນຸດ! ຂໍໃຫ້ເຮົາບອກເຈົ້າກ່ຽວກັບຄວາມຈິງໜຶ່ງປະການ: ປັດຈຸບັນນີ້ ບໍ່ວ່າເຈົ້າຈະມີຫົວໃຈໃນການເຄົາລົບນັບຖື ຫຼື ບໍ່ ແມ່ນມີຄວາມສຳຄັນໜ້ອຍຫຼາຍ; ເຮົາບໍ່ກັງວົນ ແລະ ບໍ່ເປັນຫ່ວງສິ່ງນັ້ນເລີຍ. ແຕ່ເຮົາຍັງຕ້ອງບອກເຈົ້າສິ່ງນີ້: ໃນທີ່ສຸດແລ້ວ ເຈົ້າ ເຊິ່ງກໍຄື "ບຸກຄົນທີ່ມີພອນສະຫວັນ" ທີ່ບໍ່ໄດ້ຮຽນຮູ້ ແລະ ຍັງຄົງໂງ່ຈ້າ ຈະຖືກດຶງລົງດ້ວຍຄວາມເຫຼື້ອມໃສໃນຕົວເອງ ແລະ ຄວາມສະຫຼາດເລັກໆນ້ອຍໆ. ເຈົ້າຈະເປັນຜູ້ທີ່ທົນທຸກ ແລະ ຖືກຂ້ຽນຕີ. ເຮົາຈະບໍ່ໂງ່ປານນັ້ນທີ່ຈະຕິດຕາມເຈົ້າ ໃນຂະນະທີ່ເຈົ້າສືບຕໍ່ທົນທຸກໃນນະຮົກ ເພາະວ່າ ເຮົາບໍ່ແມ່ນປະເພດດຽວກັນກັບເຈົ້າ. ຈົ່ງຢ່າລືມວ່າ ເຈົ້າເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນ ທີ່ຖືກເຮົາສາບແຊ່ງ ແຕ່ຍັງຖືກເຮົາສັ່ງສອນ ແລະ ຊ່ວຍໃຫ້ລອດພົ້ນ ແລະ ບໍ່ມີສິ່ງໃດໃນຕົວເຈົ້າ ທີ່ເຮົາຈະມີຄວາມລັງເລໃນການຈາກໄປ. ໃນເວລາໃດກໍຕາມທີ່ມີການປະຕິບັດພາລະກິດຂອງເຮົາ, ເຮົາບໍ່ເຄີຍຖືກຈຳກັດໂດຍບຸກຄົນ, ເຫດການ ຫຼື ວັດຖຸໃດ. ທັດສະນະຂອງເຮົາ ແລະ ມູມມອງຂອງເຮົາກ່ຽວກັບມະນຸດຊາດແມ່ນຍັງຄືເກົ່າສະເໝີ. ໂດຍສະເພາະແລ້ວ ເຮົາບໍ່ດີຕໍ່ເຈົ້າ ຍ້ອນວ່າ ເຈົ້າແມ່ນສ່ວນປະກອບໃນການຄຸ້ມຄອງຂອງເຮົາ ແລະ ບໍ່ໄດ້ມີຄວາມພິເສດຫຼາຍໄປກວ່າສິ່ງມີຊີວິດອື່ນໆ. ນີ້ແມ່ນຄຳແນະນຳຂອງເຮົາທີ່ມີໃຫ້ເຈົ້າ: ເຈົ້າຕ້ອງຈື່ຕະຫຼອດເວລາວ່າ ເຈົ້າບໍ່ແມ່ນຫຍັງນອກຈາກສິ່ງຊົງສ້າງຂອງພຣະເຈົ້າ! ເຖິງວ່າ ເຈົ້າອາດຈະແບ່ງປັນການມີຢູ່ຂອງເຈົ້າກັບເຮົາ ແຕ່ເຈົ້າຄວນຮູ້ຈັກຕົວຕົນຂອງເຈົ້າເອງ; ຈົ່ງຢ່າຄິດວ່າ ຕົວເອງສູງສົ່ງທີ່ສຸດ. ເຖິງວ່າ ເຮົາບໍ່ໄດ້ຕຳນິຕິຕຽນເຈົ້າ ຫຼື ຈັດການກັບເຈົ້າ ແຕ່ກົງກັນຂ້າມທັກທາຍເຈົ້າດ້ວຍໃບໜ້າທີ່ຍິ້ມແຍ້ມ ແຕ່ນີ້ບໍ່ພຽງພໍທີ່ຈະພິສູດວ່າ ເຈົ້າແມ່ນປະເພດດຽວກັນກັບເຮົາ. ຕົວເຈົ້າເອງ, ເຈົ້າຄວນຮູ້ຈັກຕົວເຈົ້າເອງ ເພື່ອເປັນຜູ້ທີ່ສະແຫວງຫາຄວາມຈິງ, ບໍ່ແມ່ນເປັນຄວາມຈິງເອງ! ເຈົ້າຕ້ອງມີຄວາມພ້ອມຕະຫຼອດເວລາ ເພື່ອປ່ຽນແປງຕາມພຣະທຳຂອງເຮົາ. ເຈົ້າບໍ່ສາມາດໜີພົ້ນຈາກສິ່ງນີ້ໄດ້. ໃນເວລາທີ່ມີຄ່ານີ້, ເຮົາຂໍແນະນຳເຈົ້າ ໃຫ້ເຈົ້າຖືເອົາໂອກາດທີ່ຫາຍາກນີ້ພະຍາຍາມ ແລະ ຮຽນຮູ້ບາງສິ່ງ. ຢ່າຫຼອກລວງເຮົາ; ເຮົາບໍ່ຕ້ອງການໃຫ້ເຈົ້າໃຊ້ການປະຈົບປະແຈງ ເພື່ອພະຍາຍາມ ແລະ ຫຼອກລວງເຮົາ. ເມື່ອເຈົ້າສະແຫວງຫາເຮົາ, ມັນກໍບໍ່ແມ່ນເພື່ອເຮົາທັງໝົດ ແຕ່ກົງກັນຂ້າມ ມັນແມ່ນເພື່ອເຈົ້າເອງ!

# ຜູ້ຄົນທີ່ຖືກເລືອກໃນປະເທດຈີນ ບໍ່ສາມາດເປັນຕົວແທນຊົນເຜົ່າໃດ ໃນປະເທດອິດສະຣາເອນ

ຄົວເຮືອນຂອງເດວິດຄືຄອບຄົວດັ່ງເດີມທີ່ຮັບພັນທະສັນຍາ ແລະ ມໍລະດົກຂອງພຣະເຢໂຮວາ. ໃນຕອນດັ່ງເດີມ ພວກເຂົາແມ່ນໜຶ່ງໃນບັນດາຊົນເຜົ່າຂອງອິດສະຣາເອນທີ່ໄດ້ຖືກເລືອກ. ໃນເວລານັ້ນ ພຣະເຢໂຮວາໄດ້ຕັ້ງກົດບັນຍັດສຳລັບຊາວອິດສະຣາເອນວ່າ ຊາວຢິວທຸກຄົນທີ່ຢູ່ໃນຄົວເຮືອນຂອງເດວິດ, ທຸກຄົນທີ່ເກີດໃນຄົວເຮືອນນັ້ນຈະໄດ້ຮັບມໍລະດົກຂອງພຣະອົງ. ພວກເຂົາຈະໄດ້ຮັບເປັນຮ້ອຍເທົ່າ ແລະ ໄດ້ຮັບສະຖານະເປັນລູກຊາຍກົກ. ໃນເວລານັ້ນ ພວກເຂົາເປັນກຸ່ມຄົນທີ່ສູງສົ່ງທີ່ສຸດທ່າມກາງຊາວອິດສະຣາເອນທັງໝົດ ນັ້ນກໍຄື ພວກເຂົາມີຕຳແໜ່ງສູງສຸດທ່າມກາງປະຊາຊົນທັງໝົດຂອງອິດສະຣາເອນ ແລະ ພວກເຂົາໄດ້ຮັບໃຊ້ພຣະເຢໂຮວາໃນພຣະວິຫານໂດຍກົງ ໂດຍນຸ່ງເສື້ອຄຸມ ແລະ ໃສ່ມົງກຸດຂອງປະໂລຫິດ. ໃນເວລານັ້ນ, ພຣະເຢໂຮວາເອີ້ນພວກເຂົາວ່າ ເປັນຄົນຮັບໃຊ້ທີ່ຊື່ສັດ ແລະ ໃຈບຸນ ແລະ ພວກເຂົາກໍໄດ້ຮັບຄວາມນັບຖືຈາກຊົນເຜົ່າຕ່າງໆໃນອິດສະຣາເອນ. ສະນັ້ນ, ໃນເວລານັ້ນ ພວກເຂົາທຸກຄົນຖືກກ່າວເຖິງໃນຖານະເປັນເຈົ້ານາຍ, ທຸກສິ່ງທັງໝົດນີ້ກໍແມ່ນພາລະກິດຂອງພຣະເຢໂຮວາໃນຍຸກແຫ່ງພຣະບັນຍັດ. ໃນປັດຈຸບັນ ພວກເຂົາຍັງຮັບໃຊ້ພຣະເຢໂຮວາໃນລັກສະນະແບບນີ້ໃນພຣະວິຫານຢູ່, ສະນັ້ນພວກເຂົາຈຶ່ງເປັນກະສັດທີ່ພຣະເຢໂຮວາແຕ່ງຕັ້ງສະເໝີມາ. ບໍ່ມີໃຜທີ່ສາມາດເອົາມົງກຸດຂອງພວກເຂົາໄປໄດ້ ແລະ ບໍ່ມີໃຜທີ່ສາມາດປ່ຽນແປງການຮັບໃຊ້ຂອງພວກເຂົາ ເພາະພວກເຂົາຄືຄົວເຮືອນຂອງເດວິດຕັ້ງແຕ່ຕົ້ນມາ; ນີ້ຄືສິ່ງທີ່ພຣະເຢໂຮວາມອບໃຫ້ກັບພວກເຂົາ. ເຫດຜົນທີ່ພວກເຈົ້າບໍ່ໄດ້ເປັນໜຶ່ງໃນຄົວເຮືອນຂອງເດວິດກໍຍ້ອນວ່າ ພວກເຈົ້າບໍ່ໄດ້ມາຈາກອິດສະຣາເອນ ແຕ່ພວກເຈົ້າເປັນຄອບຄົວຊາວຕ່າງຊາດທີ່ຢູ່ນອກອິດສະຣາເອນ. ອີກຢ່າງທຳມະຊາດຂອງພວກເຈົ້າບໍ່ແມ່ນການນະມັດສະການພຣະເຢໂຮວາ ແຕ່ເປັນການຕໍ່ຕ້ານພຣະອົງສະນັ້ນພວກເຈົ້າບໍ່ມີຖານະຄືກັບຄົນທີ່ມາຈາກຄົວເຮືອນຂອງເດວິດ ແລະ ພວກເຈົ້າບໍ່ແມ່ນໜຶ່ງໃນກຸ່ມຄົນທີ່ຈະໄດ້ຮັບມໍລະດົກຂອງເຮົາ. ໂດຍສະເພາະແລ້ວ ພວກເຈົ້າບໍ່ແມ່ນຄົນທີ່ຈະໄດ້ຮັບພອນຈາກເຮົາເປັນຮ້ອຍເທົ່າ.

ໃນອິດສະຣາເອນເວລານັ້ນ, ໄດ້ມີຫຼາຍຄົວເຮືອນທີ່ແຕກຕ່າງກັນ ແລະ ຫຼາຍຊົນເຜົ່າທີ່ແຕກຕ່າງກັນ, ແຕ່ພວກເຂົາທັງໝົດກໍເປັນຄົນທີ່ຖືກເລືອກ. ເຖິງຢ່າງໃດກໍຕາມ, ສິ່ງທີ່ແຕກຕ່າງຈາກປະເທດອື່ນກໍຄື ໃນອິດສະຣາເອນນັ້ນ ຜູ້ຄົນຖືກຈັດແບ່ງອອກເປັນຊົນເຜົ່າ, ຕຳແໜ່ງຂອງພວກເຂົາຢູ່ຕໍ່ໜ້າພຣະເຢໂຮວາກໍແຕກຕ່າງກັນ ແລະ ຂອບເຂດຂອງແຕ່ລະຄົນກໍຖືກວາງອອກຕາມເຜົ່າທີ່ແຕກຕ່າງກັນ. ນອກຈາກໃນອິດສະຣາເອນແລ້ວ ຜູ້ຄົນໃນປະເທດອື່ນບໍ່ສາມາດກ່າວເຖິງຕົນເອງວ່າ ເປັນຄົວເຮືອນຂອງເດວິດ, ຢາໂຄບ ຫຼື ໂມເຊໄດ້. ເພາະວ່າ ສິ່ງນີ້ຂັດກັບຄວາມຈິງ ນັ້ນກໍຄື ຊົນເຜົ່າແຫ່ງອິດສະຣາເອນບໍ່ສາມາດຖືກອ້າງຢ່າງຜິດໆໃນປະເທດອື່ນໄດ້. ຜູ້ຄົນໃຊ້ຊື່ເດວິດ, ອັບຣາຮາມ, ເອຊາວ ແລະ ອື່ນໆ

ຢ່າງຜິດຢູ່ເລື້ອຍໆ ຫຼື ພວກເຂົາເວົ້າວ່າ "ບັດນີ້ ພວກເຮົາໄດ້ຍອມຮັບເອົາພຣະເຈົ້າແລ້ວ ສະນັ້ນ ພວກເຮົາກໍເປັນຄົນໃນຄົວເຮືອນຢາໂຄບ". ການເວົ້າສິ່ງເຫຼົ່ານີ້ບໍ່ໄດ້ມີຄວາມໝາຍຫຍັງເລີຍ ນອກຈາກ ການໃຊ້ເຫດຜົນທີ່ບໍ່ມີຫຼັກຖານຂອງມະນຸດ ແລະ ບໍ່ໄດ້ມາຈາກພຣະເຢໂຮວາໂດຍກົງ ຫຼື ບໍ່ໄດ້ມາຈາກ ແນວຄິດຂອງເຮົາ. ມັນເປັນເລື່ອງໄຮ້ສາລະຂອງມະນຸດເອງແທ້ໆ! ເໝືອນກັບຜູ້ກ່າວຄຳປາໄສທີ່ເລົ່າ ເລື່ອງອັນເຫຼືອເຊື່ອ, ຜູ້ຄົນຄິດໄປເອງໂດຍບໍ່ມີເຫດຜົນວ່າຕົນເອງ ເປັນເຊື້ອສາຍຂອງເດວິດ ຫຼື ເປັນ ສ່ວນໜຶ່ງໃນຄອບຄົວຂອງຢາໂຄບ ແລະ ພວກເຂົາຍັງເຊື່ອວ່າ ພວກເຂົາເໝາະສົມກັບສິ່ງນັ້ນ. ຜູ້ຄົນບໍ່ ຮູ້ບໍວ່າ ຄົນທີ່ມາຈາກຄົວເຮືອນຂອງເດວິດແມ່ນໄດ້ຮັບການແຕ່ງຕັ້ງຈາກພຣະເຢໂຮວາເປັນເວລາ ດົນນານມາແລ້ວ ແລະ ບໍ່ແມ່ນເດວິດທີ່ແຕ່ງຕັ້ງເພິ່ນເອງໃຫ້ເປັນກະສັດ? ເຖິງຢ່າງໃດກໍຕາມ, ມີຫຼາຍ ຄົນທີ່ອ້າງຕົວເອງໂດຍບໍ່ມີຢາງອາຍວ່າ ເປັນເຊື້ອສາຍທີ່ມາຈາກຕະກຸນເດວິດ, ຜູ້ຄົນຊ່າງໂງ່ຈ້າແທ້ເດ! ຄວາມຈິງກໍຄື ເລື່ອງຂອງອິດສະຣາເອນບໍ່ມີສ່ວນກ່ຽວຂ້ອງຫຍັງກັບຕ່າງຊາດ ນັ້ນກໍຄື ພວກມັນແມ່ນ ສອງສິ່ງທີ່ແຕກຕ່າງກັນ ແລະ ບໍ່ກ່ຽວຂ້ອງກັນໂດຍສິ້ນເຊີງ. ເລື່ອງຂອງອິດສະຣາເອນແມ່ນເວົ້າເຖິງ ປະຊາຊົນອິດສະຣາເອນ, ຕ່າງຊາດແມ່ນບໍ່ມີສ່ວນກ່ຽວຂ້ອງຫຍັງເລີຍ ແລະ ພາລະກິດທີ່ດຳເນີນ ທ່າມກາງຕ່າງຊາດໃນປັດຈຸບັນກໍບໍ່ກ່ຽວຂ້ອງຫຍັງກັບປະຊາຊົນຂອງອິດສະຣາເອນ. ສິ່ງທີ່ເຮົາກ່າວ ກ່ຽວກັບຕ່າງຊາດແມ່ນສະແດງເຖິງສິ່ງທີ່ເຮົາກຳລັງກ່າວໃນປັດຈຸບັນ ແລະ ພາລະກິດທີ່ດຳເນີນໃນ ອິດສະຣາເອນຈະບໍ່ມີທາງສາມາດ "ບົ່ງບອກລ່ວງໜ້າ" ເຖິງພາລະກິດທ່າມກາງຕ່າງຊາດໄດ້. ນັ້ນຈະບໍ່ ສະແດງວ່າພຣະເຈົ້າຫົວບູຮານເກີນໄປບໍ? ມີພຽງແຕ່ເມື່ອພາລະກິດເລີ່ມຕົ້ນແຜ່ຂະຫຍາຍໃນທ່າມກາງ ຕ່າງຊາດເທົ່ານັ້ນ ສິ່ງທີ່ເວົ້າກ່ຽວກັບພວກເຂົາ ຫຼື ຜົນໄດ້ຮັບຂອງພວກເຂົາຈຶ່ງຈະຖືກເປີດເຜີຍອອກ ໄດ້, ສະນັ້ນ ຄຳເວົ້າຂອງຜູ້ຄົນກ່ຽວກັບອະດີດທີ່ວ່າ "ພວກເຮົາເປັນເຊື້ອສາຍຂອງເດວິດ" ຫຼື "ພຣະເຢຊູ ເປັນບຸດຊາຍຂອງເດວິດ" ກໍຍິ່ງເປັນການເວົ້າທີ່ເປັນຕາຢາກຫົວຫຼາຍທີ່ສຸດ. ພາລະກິດຂອງເຮົາໄດ້ຖືກ ຈັດແບ່ງອອກເປັນປະເພດໃຜມັນແລ້ວ. ເຮົາຈະບໍ່ກ່າວວ່າ ກວາງເປັນມ້າ; ກົງກັນຂ້າມ, ພາລະກິດ ແມ່ນແຕກຕ່າງກັນຕາມເຫດການຂອງມັນເອງ.

# ຄວາມເຂົ້າໃຈຂອງພວກເຈົ້າ ກ່ຽວກັບການອວຍພອນແມ່ນຫຍັງ?

ເຖິງແມ່ນວ່າ ບັນດາມະນຸດທີ່ເກີດມາໃນຍຸກນີ້ຈະຖືກເຮັດໃຫ້ເສື່ອມຊາມໂດຍຊາຕານ ແລະ ມານຮ້າຍທີ່ສົກກະປົກ, ຄວາມເສື່ອມຊາມດັ່ງກ່າວໄດ້ນຳຄວາມລອດພົ້ນອັນຍິ່ງໃຫຍ່ມາສູ່ພວກເຂົາ, ຄວາມລອດພົ້ນທີ່ແມ່ນແຕ່ໃຫຍ່ກວ່າພູເຂົາ ແລະ ທົ່ງພຽງຂອງສັດລ້ຽງ ແລະ ຄວາມຮັ່ງມີຢ່າງຫຼວງຫຼາຍຂອງໂຢບ ແລະ ຍິ່ງໃຫຍ່ເກີນກວ່າພອນຂອງການໄດ້ພົບກັບພຣະເຢໂຮວາທີ່ໂຢບໄດ້ຮັບພາຍຫຼັງການທົດລອງຂອງເພິ່ນອີກດ້ວຍ. ສິ່ງນີ້ໄດ້ເກີດຂຶ້ນພາຍຫຼັງທີ່ໂຢບໄດ້ຜ່ານການທົດລອງແຫ່ງຄວາມຕາຍ ເຊິ່ງເພິ່ນໄດ້ຍິນພຣະເຢໂຮວາກ່າວ ແລະ ໄດ້ຍິນສຽງຂອງພຣະເຢໂຮວາມາຕາມສາຍລົມ. ເຖິງຢ່າງໃດກໍຕາມ, ເພິ່ນບໍ່ໄດ້ເຫັນໃບໜ້າຂອງພຣະເຢໂຮວາ ແລະ ເພິ່ນກໍບໍ່ຮູ້ຈັກອຸປະນິໄສຂອງພຣະອົງ. ສິ່ງທີ່ໂຢບໄດ້ຮັບຄື ຄວາມຮັ່ງມີທາງວັດຖຸພຽງຢ່າງດຽວ ເຊິ່ງມັນເຮັດໃຫ້ໂຢບມີຄວາມສຸກທາງຮ່າງກາຍ ແລະ ມີລູກທີ່ສວຍງາມທີ່ສຸດໃນທຸກເມືອງທີ່ອ້ອມຂ້າງ, ພ້ອມທັງການປົກປ້ອງຈາກເຫຼົ່າທູດສະຫວັນເປັນຢ່າງດີ. ເພິ່ນບໍ່ເຄີຍເຫັນພຣະເຢໂຮວາ ແລະ ເຖິງແມ່ນວ່າເພິ່ນໄດ້ຖືກເອີ້ນວ່າເປັນຜູ້ຊອບທຳ, ເພິ່ນກໍບໍ່ເຄີຍຮູ້ຈັກອຸປະນິໄສຂອງພຣະເຢໂຮວາ. ແລ້ວເຖິງແມ່ນມັນສາມາດເວົ້າໄດ້ວ່າຄວາມສຸກທາງວັດຖຸຂອງຜູ້ຄົນໃນປັດຈຸບັນແມ່ນຄວາມຍາກຈົນພຽງຊົ່ວຄາວ ຫຼື ສະພາບແວດລ້ອມພາຍນອກໂລກທີ່ບໍ່ເປັນມິດ, ເຮົາກໍໄດ້ເປີດເຜີຍອຸປະນິໄສຂອງເຮົາ ເຊິ່ງເຮົາບໍ່ເຄີຍສະແດງໃຫ້ມະນຸດຊາດຮູ້ຕັ້ງແຕ່ຍຸກບູຮານ ແລະ ເປັນຄວາມລັບຢູ່ສະເໝີ, ພ້ອມທັງເປັນຄວາມລຶກລັບຕັ້ງແຕ່ຍຸກສະໄໝທີ່ຜ່ານມາ ໃຫ້ແກ່ທຸກຄົນທີ່ຕໍ່າຕ້ອຍທີ່ສຸດ ເຊິ່ງເຮົາໄດ້ມອບຄວາມລອດພົ້ນອັນຍິ່ງໃຫຍ່ທີ່ສຸດຂອງເຮົາໃຫ້. ຍິ່ງໄປກວ່ານັ້ນ, ນີ້ແມ່ນເທື່ອທຳອິດ ທີ່ເຮົາໄດ້ເປີດເຜີຍສິ່ງເຫຼົ່ານີ້; ເຮົາບໍ່ເຄີຍປະຕິບັດພາລະກິດນີ້ມາກ່ອນ. ເຖິງແມ່ນວ່າພວກເຈົ້າຈະຕໍ່າຕ້ອຍກວ່າໂຢບຫຼາຍ, ສິ່ງທີ່ພວກເຈົ້າໄດ້ຮັບ ແລະ ສິ່ງທີ່ພວກເຈົ້າໄດ້ເຫັນ ແມ່ນເໜືອກວ່າເພິ່ນຫຼາຍ. ເຖິງແມ່ນວ່າພວກເຈົ້າໄດ້ຜ່ານການທົນທຸກທຸກຊະນິດ ແລະ ໄດ້ຮັບປະສົບການກັບຄວາມທໍລະມານທຸກຮູບແບບ, ການທົນທຸກນັ້ນ ບໍ່ໄດ້ຄືກັນກັບການທົດລອງຂອງໂຢບເລີຍ; ກົງກັນຂ້າມ, ມັນຄືການພິພາກສາ ແລະ ການຂ້ຽນຕີທີ່ຄົນເຫຼົ່ານັ້ນໄດ້ຮັບ ຍ້ອນການທໍລະຍົດຂອງພວກເຂົາ, ຍ້ອນການຕໍ່ຕ້ານຂອງພວກເຂົາ ແລະ ຍ້ອນອຸປະນິໄສອັນຊອບທຳຂອງເຮົາ; ມັນເປັນການພິພາກສາ, ການຂ້ຽນຕີ ແລະ ການສາບແຊ່ງທີ່ຊອບທຳ. ໃນທາງກົງກັນຂ້າມ, ໂຢບໄດ້ເປັນບຸກຄົນທີ່ຊອບທຳຄົນໜຶ່ງທ່າມກາງຊາວອິດສະຣາເອນ ຜູ້ທີ່ໄດ້ຮັບຄວາມຮັກ ແລະ ຄວາມເມດຕາອັນຍິ່ງໃຫຍ່ຈາກພຣະເຢໂຮວາ. ເພິ່ນບໍ່ໄດ້ກະທຳສິ່ງທີ່ຊົ່ວຮ້າຍ ແລະ ເພິ່ນບໍ່ໄດ້ຕໍ່ຕ້ານພຣະເຢໂຮວາ; ກົງກັນຂ້າມ, ເພິ່ນເປັນຜູ້ທີ່ອຸທິດຕົນຢ່າງສັດຊື່ຕໍ່ພຣະເຢໂຮວາ. ຍ້ອນຄວາມຊອບທຳຂອງເພິ່ນ, ເພິ່ນຈຶ່ງຖືກທົດລອງ ແລະ ໄດ້ຜ່ານການທົດລອງຢ່າງຮ້າຍແຮງ ເພາະວ່າເພິ່ນໄດ້ເປັນຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຢໂຮວາ. ຄົນທຸກມື້ນີ້ ຕ້ອງໄດ້ຮັບການພິພາກສາ ແລະ ການສາບແຊ່ງຂອງເຮົາ ຍ້ອນຄວາມສົກກະປົກ ແລະ ຄວາມບໍ່ຊອບທຳຂອງພວກເຂົາ. ເຖິງແມ່ນວ່າ ຄວາມທົນທຸກ

ຂອງພວກເຂົາບໍ່ມີຫຍັງຖ້າທຽບໃສ່ກັບສິ່ງທີ່ໂຢບໄດ້ປະສົບໃນຕອນທີ່ເພິ່ນໄດ້ສູນເສຍສັດລ້ຽງຂອງເພິ່ນ, ຊັບສົມບັດຂອງເພິ່ນ, ຂ້າໃຊ້ຂອງເພິ່ນ, ລູກຫຼານຂອງເພິ່ນ ແລະ ບັນດາຜູ້ທີ່ເພິ່ນຮັກທັງໝົດ, ສິ່ງທີ່ຜູ້ຄົນໃນປັດຈຸບັນທົນທຸກແມ່ນເປັນການຫຼໍ່ຫຼອມດ້ວຍໄຟ ແລະ ການເຜົາໄໝ້. ແລ້ວສິ່ງທີ່ເຮັດໃຫ້ມັນຮ້າຍແຮງໄປກວ່າສິ່ງທີ່ໂຢບໄດ້ປະສົບກໍຄືການທົດລອງດັ່ງກ່າວນີ້ບໍ່ມີການຫຼຸດລົງ ຫຼື ນຳອອກຍ້ອນຜູ້ຄົນອ່ອນແອ; ກົງກັນຂ້າມ, ພວກມັນເປັນການທົດລອງຢ່າງຍາວນານ ແລະ ສືບຕໍ່ຈົນເຖິງມື້ສຸດທ້າຍໃນຊີວິດຂອງພວກເຂົາ. ນີ້ຄືການລົງໂທດ, ການພິພາກສາ ແລະ ການສາບແຊ່ງ; ມັນເປັນການເຜົາໄໝ້ທີ່ໄຮ້ຄວາມປານີ ແລະ ຍິ່ງໄປກວ່ານັ້ນ, ມັນຍັງເປັນ "ມໍລະດົກ" ອັນຊອບທຳຂອງມະນຸດຊາດ. ມັນເປັນສິ່ງທີ່ຄົນສົມຄວນໄດ້ຮັບ ແລະ ມັນກໍ່ເປັນບ່ອນທີ່ເຮົາສະແດງອອກອຸປະນິໄສອັນຊອບທຳຂອງເຮົາ. ນີ້ຄືຄວາມຈິງທີ່ຄວນຮູ້. ເຖິງຢ່າງໃດກໍ່ຕາມ, ສິ່ງທີ່ຄົນໄດ້ຮັບຢ່າງຫຼວງຫຼາຍ ແມ່ນເກີນກວ່າຄວາມທຸກທໍລະມານ ທີ່ພວກເຂົາທົນທຸກໃນປັດຈຸບັນ. ຄວາມທໍລະມານທີ່ພວກເຈົ້າທົນທຸກແມ່ນເປັນພຽງຄວາມຍາກລຳບາກທີ່ເກີດຈາກຄວາມໂງ່ຈ້າຂອງພວກເຈົ້າເທົ່ານັ້ນ, ໃນຂະນະທີ່ສິ່ງທີ່ເຈົ້າໄດ້ຮັບນັ້ນຍິ່ງໃຫຍ່ກວ່າຄວາມທຸກທໍລະມານຂອງພວກເຈົ້າເປັນຮ້ອຍເທົ່າ. ອີງຕາມພຣະບັນຍັດຂອງອິດສະຣາເອນໃນພັນທະສັນຍາເດີມນັ້ນ, ທຸກຄົນທີ່ຕໍ່ຕ້ານເຮົາ, ທຸກຄົນທີ່ພິພາກສາເຮົາຢ່າງເປີດເຜີຍ ແລະ ທຸກຄົນທີ່ບໍ່ປະຕິບັດຕາມທາງຂອງເຮົາ ແລະ ກົງກັນຂ້າມຄືກ້າຖວາຍເຄື່ອງບູຊາທີ່ໝິ່ນປະໝາດເຮົາ ແມ່ນຈະຖືກທຳລາຍໂດຍໄຟໃນວິຫານຢ່າງແນ່ນອນ ຫຼື ຖືກແກວ່ງກ້ອນຫີນໃສ່ຈົນຕາຍໂດຍຄົນທີ່ຖືກເລືອກຂອງເຮົາ ແລະ ແມ່ນແຕ່ບັນດາເຊື້ອສາຍຂອງເຜົ່າຂອງພວກເຂົາເອງ ແລະ ຍາດຕິພີ່ນ້ອງໂດຍກົງອື່ນໆກໍຈະທົນທຸກທໍລະມານຈາກການສາບແຊ່ງຂອງເຮົາ. ໃນຊີວິດໃນອະນາຄົດ, ພວກເຂົາຈະບໍ່ເປັນອິດສະຫຼະ, ແຕ່ຈະເປັນທາດຂອງຂ້າທາດຂອງເຮົາ ແລະ ເຮົາຈະເນລະເທດພວກເຂົາໄປຢູ່ທ່າມກາງຊາວຕ່າງຊາດ ແລະ ພວກເຂົາຈະບໍ່ສາມາດກັບຄືນມາບ້ານເກີດເມືອງນອນຂອງຕົນເອງໄດ້ອີກ. ອີງຕາມການກະທຳ ແລະ ພຶດຕິກຳຂອງຄົນໃນທຸກມື້ນີ້, ຄວາມທົນທຸກທໍລະມານຂອງພວກເຂົາຍັງບໍ່ຮ້າຍແຮງເທົ່າກັບການລົງໂທດທີ່ຊາວອິດສະຣາເອນໄດ້ຮັບ. ການເວົ້າວ່າ ສິ່ງທີ່ພວກເຈົ້າກຳລັງທົນທຸກທໍລະມານໃນປັດຈຸບັນນີ້ເປັນຜົນກຳ ແມ່ນບໍ່ມີຂໍ້ພິສູດ ເພາະວ່າພວກເຈົ້າໄດ້ຂ້າມຜ່ານເສັ້ນແທ້ໆ. ຖ້າຫາກພວກເຈົ້າຢູ່ໃນປະເທດອິດສະຣາເອນ, ພວກເຈົ້າຈະກາຍເປັນຄົນບາບຊົ່ວນິລັນດອນ ແລະ ພວກເຈົ້າຈະຖືກສັບເປັນຕ່ອນໆໂດຍຊາວອິດສະຣາເອນແຕ່ດົນແລ້ວ ແລະ ຖືກເຜົາດ້ວຍໄຟຈາກສະຫວັນໃນວິຫານຂອງພຣະເຢໂຮວາ. ສິ່ງທີ່ພວກເຈົ້າໄດ້ຮັບໃນປັດຈຸບັນນີ້ແມ່ນຫຍັງ? ແມ່ນຫຍັງທີ່ພວກເຈົ້າໄດ້ຮັບ ແລະ ແມ່ນຫຍັງທີ່ພວກເຈົ້າໄດ້ຊື່ນຊົມ? ເຮົາໄດ້ເປີດເຜີຍອຸປະນິໄສອັນຊອບທຳຂອງເຮົາໃນຕົວພວກເຈົ້າແລ້ວ, ແຕ່ສິ່ງທີ່ສຳຄັນທີ່ສຸດກໍ່ຄື ເຮົາໄດ້ເປີດເຜີຍຄວາມອົດທົນຂອງເຮົາສຳລັບການໄຖ່ບາບມະນຸດຊາດ. ຄົນໆໜຶ່ງສາມາດກ່າວໄດ້ວ່າ ພາລະກິດດຽວທີ່ເຮົາໄດ້ປະຕິບັດໃນຕົວພວກເຈົ້າກໍຄືພາລະກິດແຫ່ງຄວາມອົດທົນ, ນັ້ນກໍຄືປະຕິບັດເພື່ອປະໂຫຍດໃນການຄຸ້ມຄອງຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ແມ່ນປະຕິບັດເພື່ອຄວາມສຸກຂອງມວນມະນຸດຊາດ.

ເຖິງແມ່ນວ່າໂຢບໄດ້ຜ່ານການທົດລອງຕ່າງໆນາໆຈາກພຣະເຢໂຮວາ, ເພິ່ນກໍເປັນພຽງແຕ່ຜູ້ມີ

ຄວາມຊອບທຳຄົນໜຶ່ງທີ່ນະມັດສະການພຣະເຢໂຮວາ. ເຖິງຈະຜ່ານການທົດລອງເຫຼົ່ານີ້, ເພິ່ນກໍບໍ່ໄດ້ຕໍ່ວ່າພຣະເຢໂຮວາ ແລະ ເພິ່ນປິຕິຍິນດີກັບການທີ່ເພິ່ນໄດ້ພົບພຣະອົງ. ບໍ່ພຽງແຕ່ຄົນໃນທຸກມື້ນີ້ ທີ່ບໍ່ຊື່ນຊົມຍິນດີກັບການປາກົດຕົວຂອງພຣະເຢໂຮວາ, ແຕ່ພວກເຂົາກັບປະຕິເສດ, ກຽດຊັງ, ຕໍ່ວ່າ ແລະ ເຍາະເຍີ້ຍຮູບລັກສະນະຂອງພຣະອົງ. ພວກເຈົ້າບໍ່ໄດ້ຮັບຫຼາຍເກີນໄປບໍ່? ຄວາມທຸກທໍລະມານຂອງພວກເຈົ້າຍິ່ງໃຫຍ່ຫຼາຍແທ້ບໍ? ພວກເຈົ້າບໍ່ໄດ້ໂຊກດີຫຼາຍກວ່າມາລີ ແລະ ຢາໂກໂບບໍ? ການຕໍ່ຕ້ານຂອງພວກເຈົ້າເລັກນ້ອຍແທ້ບໍ? ມັນເປັນໄປໄດ້ບໍ່ວ່າ ສິ່ງທີ່ເຮົາຕ້ອງການຈາກພວກເຈົ້າ ແລະ ສິ່ງທີ່ເຮົາຂໍຮ້ອງຈາກພວກເຈົ້າ ແມ່ນຍິ່ງໃຫຍ່ ແລະ ຫຼາຍເກີນໄປ? ຄວາມໂກດຮ້າຍຂອງເຮົາພຽງແຕ່ຖືກປ່ອຍໃສ່ຊາວອິດສະຣາເອນທີ່ໄດ້ຕໍ່ຕ້ານເຮົາ, ບໍ່ແມ່ນປ່ອຍໃສ່ພວກເຈົ້າໂດຍກົງ; ສິ່ງທີ່ພວກເຈົ້າໄດ້ຮັບແມ່ນພຽງແຕ່ການພິພາກສາໄຮ້ຄວາມປານີ ແລະ ການເປີດເຜີຍຂອງເຮົາເທົ່ານັ້ນ, ພ້ອມທັງການຫຼໍ່ຫຼອມດ້ວຍໄຟ. ເຖິງແນວນັ້ນກໍ່ຕາມ, ຜູ້ຄົນກໍ່ຍັງສືບຕໍ່ໃນການຕໍ່ຕ້ານ ແລະ ໂຕ້ແຍ້ງກັບເຮົາ ແລະ ພວກເຂົາເຮັດແບບນັ້ນໂດຍບໍ່ມີການຍອມແມ່ນແຕ່ໜ້ອຍດຽວ. ເຖິງກັບວ່າມີບາງຄົນທີ່ຕີໂຕຫ່າງຈາກເຮົາ ແລະ ປະຕິເສດເຮົາ; ຄົນເຫຼົ່ານີ້ບໍ່ດີໄປກວ່າກຸ່ມຄໍຣາ ແລະ ດາທານຜູ້ທີ່ຕໍ່ຕ້ານໂມເຊ. ໃຈຂອງຄົນແຂງກະດ້າງເກີນໄປ ແລະ ທຳມະຊາດຂອງພວກເຂົາດື້ດ້ານເກີນໄປ. ພວກເຂົາບໍ່ມີວັນທີ່ຈະປ່ຽນແປງເສັ້ນທາງເກົ່າຂອງພວກເຂົາໄດ້. ເຮົາເວົ້າວ່າ ພວກເຂົາເປັນເໝືອນໂສເພນີທີ່ນອນເປືອຍກາຍໃນເວລາກາງເວັນ ແລະ ພຣະທຳຂອງເຮົາກໍຮຸນແຮງຈົນເຖິງຈຸດທີ່ວ່າ ພວກມັນອາດຈະເຖິງກັບ “ຫຍາບຄາຍຕໍ່ຫູ”, ໂດຍເປີດທຳມະຊາດຂອງຜູ້ຄົນຕໍ່ແສງສະຫວ່າງ, ແຕ່ພວກເຂົາກໍພຽງແຕ່ງຶກຫົວ, ຫຼັ່ງນໍ້າຕາໜ້ອຍໜຶ່ງ ແລະ ບັງຄັບຕົວເອງໃຫ້ຮູ້ສຶກໂສກເສົ້າໜ້ອຍໜຶ່ງ. ເມື່ອສິ່ງນີ້ໄດ້ຜ່ານໄປແລ້ວ, ພວກເຂົາກໍ່ໂຫດຮ້າຍຄືກັນກັບລາຊາສັດປ່າເທິງພູເຂົາ ແລະ ພວກເຂົາກໍບໍ່ຮັບຮູ້ຫຍັງທັງນັ້ນ. ຜູ້ຄົນທີ່ມີອຸປະນິໄສແບບນີ້ຈະສາມາດຮູ້ໄດ້ແນວໃດວ່າ ພວກເຂົາໂຊກດີຫຼາຍກວ່າໂຢບຕັ້ງຮ້ອຍເທົ່າ? ພວກເຂົາຈະສາມາດຮັບຮູ້ໄດ້ແນວໃດວ່າ ສິ່ງທີ່ພວກເຂົາຊື່ນຊົມນັ້ນຄືການອວຍພອນທີ່ບໍ່ຄ່ອຍເຫັນມາກ່ອນໃນຍຸກສະໄໝຜ່ານມາ ແລະ ເປັນສິ່ງທີ່ບໍ່ມີຜູ້ໃດເຄີຍຊື່ນຊົມມາກ່ອນ? ຈິດສຳນຶກຂອງຄົນຈະສາມາດຮູ້ສຶກເຖິງການອວຍພອນແບບນີ້, ການອວຍພອນທີ່ປະກອບມີການລົງໂທດໄດ້ແນວໃດ? ເວົ້າຢ່າງກົງໄປກົງມາ, ທັງໝົດທີ່ເຮົາຕ້ອງການຈາກພວກເຈົ້າ ແມ່ນເພື່ອໃຫ້ພວກເຈົ້າສາມາດເປັນແບບຢ່າງສຳລັບພາລະກິດຂອງເຮົາ, ເປັນພະຍານສຳລັບອຸປະນິໄສທັງໝົດຂອງເຮົາ ແລະ ການກະທຳຂອງເຮົາທັງໝົດ ແລະ ເພື່ອໃຫ້ພວກເຈົ້າອາດຖືກປົດປ່ອຍເປັນອິດສະຫຼະຈາກການຄວບຄຸມຂອງຊາຕານ. ເຖິງຢ່າງໃດກໍ່ຕາມ, ຜູ້ຄົນຖືກຂັບໄລ່ໂດຍພາລະກິດຂອງເຮົາຢູ່ສະເໝີ ແລະ ຕັ້ງໃຈເປັນປໍລະປັກຕໍ່ມັນ. ຄົນດັ່ງກ່າວຈະບໍ່ສາມາດກະຕຸ້ນເຮັດໃຫ້ເຮົານຳເອົາກົດບັນຍັດຂອງອິດສະຣາເອນກັບຄືນມາໃຊ້ ແລະ ນຳເອົາຄວາມໂກດຮ້າຍມາສູ່ຜູ້ຄົນເຫຼົ່ານັ້ນຄືກັບທີ່ເຮົາໄດ້ນຳມາສູ່ອິດສະຣາເອນໄດ້ແນວໃດ? ເຖິງແມ່ນວ່າມີຫຼາຍຄົນໃນພວກເຈົ້າທີ່ “ເຊື່ອຟັງ ແລະ ຍອມອ່ອນນ້ອມ” ຕໍ່ເຮົາ, ແຕ່ກໍຍັງມີອີກຫຼາຍຄົນທີ່ເຊື້ອສາຍຂອງກຸ່ມຕະກູນຄໍຣາ. ເມື່ອເຮົາໄດ້ບັນລຸຄວາມສະຫງ່າລາສີຂອງເຮົາຢ່າງບໍລິບູນແລ້ວ, ເຮົາຈະໃຊ້ໄຟຈາກສະຫວັນເພື່ອເຜົາພວກເຂົາໃຫ້ເປັນຂີ້ເທົ່າ. ພວກເຈົ້າຄວນຮູ້ໄວ້ວ່າ ເຮົາຈະບໍ່ຂ້ຽນຕີຄົນດ້ວຍຄຳເວົ້າ

ຂອງເຮົາອີກຕໍ່ໄປ; ກົງກັນຂ້າມ, ກ່ອນການປະຕິບັດພາລະກິດຂອງອິດສະຣາເອນ, ເຮົາຈະເຜົາ "ກຸ່ມຄໍຣາ" ຢ່າງສົມບູນ ເຊິ່ງເປັນຜູ້ທີ່ຕໍ່ຕ້ານເຮົາ ແລະ ເປັນຜູ້ທີ່ເຮົາໄດ້ກໍາຈັດມາດົນແລ້ວ. ມະນຸດຊາດຈະບໍ່ມີໂອກາດໄດ້ຊື່ນຊົມເຮົາອີກຕໍ່ໄປ; ກົງກັນຂ້າມ ສິ່ງດຽວທີ່ພວກເຂົາຈະເຫັນແມ່ນຄວາມໂກດຮ້າຍຂອງເຮົາ ແລະ ແປວໄຟຂອງເຮົາຈາກສະຫວັນ. ເຮົາຈະເປີດເຜີຍຜົນໄດ້ຮັບທີ່ຫຼາກຫຼາຍຂອງຄົນທຸກປະເພດ ແລະ ເຮົາຈະແບ່ງພວກເຂົາທັງໝົດອອກເປັນໝວດໝູ່. ເຮົາຈະຈົດບັນທຶກທຸກການກະທໍາທີ່ກະບົດຂອງພວກເຂົາ ແລະ ຈາກນັ້ນກໍຈະຈົບສິ້ນພາລະກິດຂອງເຮົາ, ເພື່ອວ່າຜົນການກະທໍາຂອງພວກເຂົາຈະຖືກກໍານົດຕາມຄໍາຕັດສິນຂອງເຮົາ ໃນຂະນະທີ່ຢູ່ເທິງແຜ່ນດິນໂລກ ພ້ອມທັງທ່າທີຂອງພວກເຂົາຕໍ່ເຮົາ. ເມື່ອເວລານັ້ນມາເຖິງ, ຈະບໍ່ມີສິ່ງໃດທີ່ສາມາດປ່ຽນແປງຜົນກໍາຂອງພວກເຂົາໄດ້. ໃຫ້ຜູ້ຄົນເປີດເຜີຍຜົນການກະທໍາຂອງພວກເຂົາເອງ! ຫຼັງຈາກນັ້ນເຮົາຈະມອບຜົນການກະທໍາຂອງຄົນເຫຼົ່ານັ້ນໃຫ້ກັບພຣະບິດາຂອງເຮົາທີ່ຢູ່ໃນສະຫວັນ.

# ແມ່ນຫຍັງຄືຄວາມເຂົ້າໃຈຂອງເຈົ້າກ່ຽວກັບພຣະເຈົ້າ?

ຜູ້ຄົນເຊື່ອໃນພຣະເຈົ້າຕັ້ງແຕ່ດົນແລ້ວ, ແຕ່ຄົນສ່ວນໃຫຍ່ບໍ່ມີຄວາມເຂົ້າໃຈວ່າຄຳ "ພຣະເຈົ້າ" ແມ່ນຫຍັງ ແລະ ພຽງແຕ່ຕິດຕາມດ້ວຍຄວາມສັບສົນມຶນງົງ. ພວກເຂົາບໍ່ຮູ້ຫຍັງເລີຍວ່າ ຍ້ອນຫຍັງແທ້ ມະນຸດຈຶ່ງຕ້ອງເຊື່ອໃນພຣະເຈົ້າ ຫຼື ພຣະເຈົ້າແມ່ນຫຍັງ. ຖ້າຜູ້ຄົນຮູ້ພຽງແຕ່ເຊື່ອ ແລະ ຕິດຕາມພຣະເຈົ້າເທົ່ານັ້ນ, ແຕ່ບໍ່ຮູ້ວ່າພຣະເຈົ້າແມ່ນຫຍັງ ຫຼື ຖ້າພວກເຂົາຍັງບໍ່ຮູ້ຈັກພຣະເຈົ້າ, ແລ້ວນີ້ບໍ່ແມ່ນເລື່ອງທີ່ຕະຫຼົກທີ່ເປັນຕາຫົວຫຼາຍບໍ? ເມື່ອໄດ້ມາຈົນເຖິງປັດຈຸບັນນີ້ ເຖິງແມ່ນວ່າຜູ້ຄົນໄດ້ເປັນພະຍານເຖິງຄວາມລຶກລັບຫຼາຍຢ່າງໃນສະຫວັນ ແລະ ໄດ້ຍິນຄວາມຮູ້ທີ່ເລິກເຊິ່ງຫຼາຍທີ່ມະນຸດບໍ່ເຄີຍເຂົ້າໃຈມາກ່ອນຈັກເທື່ອ, ພວກເຂົາບໍ່ຮູ້ຄວາມຈິງຫຼາຍຢ່າງທີ່ເປັນພື້ນຖານທີ່ສຸດເຊິ່ງມະນຸດບໍ່ເຄີຍຕຶກຕອງມາກ່ອນ. ບາງຄົນອາດເວົ້າວ່າ: "ພວກເຮົາເຊື່ອໃນພຣະເຈົ້າເປັນເວລາຫຼາຍປີແລ້ວ. ພວກເຮົາຈະບໍ່ຮູ້ໄດ້ແນວໃດວ່າ ພຣະເຈົ້າແມ່ນຫຍັງ? ຄຳຖາມນີ້ບໍ່ໄດ້ດູຖູກພວກເຮົາບໍ?" ແຕ່ໃນຄວາມເປັນຈິງແລ້ວ, ເຖິງແມ່ນວ່າໃນປັດຈຸບັນຜູ້ຄົນຕິດຕາມເຮົາ, ພວກເຂົາບໍ່ຮູ້ຫຍັງກ່ຽວກັບພາລະກິດໃດໜຶ່ງໃນປັດຈຸບັນ ແລະ ລົ້ມເຫຼວທີ່ຈະເຂົ້າໃຈແມ່ນແຕ່ຄຳຖາມທີ່ຊັດເຈນທີ່ສຸດ ແລະ ງ່າຍທີ່ສຸດ, ແຮງໄກທີ່ຈະເວົ້າເຖິງຄຳຖາມທີ່ສັບຊ້ອນສູງເຊັ່ນຄຳຖາມກ່ຽວກັບພຣະເຈົ້າ. ໃຫ້ຮູ້ວ່າຄຳຖາມທີ່ເຈົ້າບໍ່ສົນໃຈ, ຄຳຖາມທີ່ເຈົ້າບໍ່ໄດ້ລະບຸ ແມ່ນຄຳຖາມທີ່ສຳຄັນທີ່ສຸດທີ່ເຈົ້າຕ້ອງເຂົ້າໃຈ ເພາະເຈົ້າຮູ້ພຽງແຕ່ເຮັດຕາມຝູງຊົນ ໂດຍບໍ່ໃສ່ໃຈ ແລະ ບໍ່ສົນໃຈຕໍ່ສິ່ງທີ່ເຈົ້າຄວນກຽມພ້ອມໃຫ້ແກ່ຕົນເອງ. ເຈົ້າຮູ້ແທ້ບໍວ່າ ເປັນຫຍັງເຈົ້າຈຶ່ງຄວນມີຄວາມເຊື່ອໃນພຣະເຈົ້າ? ເຈົ້າຮູ້ແທ້ໆບໍວ່າ ພຣະເຈົ້າແມ່ນຫຍັງ? ເຈົ້າຮູ້ແທ້ໆບໍວ່າ ມະນຸດແມ່ນຫຍັງ? ໃນຖານະເປັນຜູ້ທີ່ມີຄວາມເຊື່ອໃນພຣະເຈົ້າ, ຖ້າເຈົ້າບໍ່ເຂົ້າໃຈສິ່ງເຫຼົ່ານີ້, ເຈົ້າຈະບໍ່ສູນເສຍສັກສີຂອງຜູ້ທີ່ເຊື່ອໃນພຣະເຈົ້າບໍ? ພາລະກິດຂອງເຮົາໃນປັດຈຸບັນແມ່ນມີດັ່ງນີ້: ເພື່ອໃຫ້ຜູ້ຄົນເຂົ້າໃຈແກ່ນແທ້ຂອງພວກເຂົາ, ເຂົ້າໃຈທຸກສິ່ງທີ່ເຮົາປະຕິບັດ ແລະ ຮູ້ໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ນີ້ຄືການກະທຳຂັ້ນສຸດທ້າຍໃນແຜນການຄຸ້ມຄອງຂອງເຮົາ, ເປັນຂັ້ນຕອນສຸດທ້າຍໃນພາລະກິດຂອງເຮົາ. ນັ້ນຄືເຫດຜົນທີ່ເຮົາກຳລັງບອກເຈົ້າຮູ້ລ່ວງໜ້າກ່ຽວກັບຄວາມລຶ້ລັບທັງໝົດຂອງຊີວິດ ເພື່ອວ່າເຈົ້າຈະສາມາດຮັບເອົາພວກມັນຈາກເຮົາໄດ້. ຍ້ອນນີ້ຄືພາລະກິດໃນຍຸກສຸດທ້າຍ, ເຮົາຈຶ່ງຕ້ອງໄດ້ບອກຄວາມຈິງທັງໝົດໃນຊີວິດທີ່ເຈົ້າບໍ່ເຄີຍໄດ້ຮູ້ມາກ່ອນໃຫ້ແກ່ເຈົ້າ, ເຖິງແມ່ນວ່າເຈົ້າຈະບໍ່ສາມາດເຂົ້າໃຈ ຫຼື ແບກຮັບມັນ ເນື່ອງຈາກເຈົ້າອ່ອນແອເກີນໄປ ແລະ ບໍ່ມີຄວາມກຽມພ້ອມທີ່ດີເລີຍ. ເຮົາຕ້ອງການສະຫຼຸບພາລະກິດຂອງເຮົາ; ເຮົາຈະສຳລັບພາລະກິດທີ່ເຮົາຄວນເຮັດ ແລະ ຈະແຈ້ງໃຫ້ເຈົ້າຮູ້ທຸກຢ່າງກ່ຽວກັບສິ່ງທີ່ເຮົາມອບໝາຍໃຫ້ເຈົ້າເຮັດ ເພື່ອບໍ່ໃຫ້ເຈົ້າຫຼົງທາງອີກ ແລະ ຫຼົງເຊື່ອຄຳຫຼອກລວງຂອງຄົນຊົ່ວຮ້າຍ ເມື່ອຄວາມມືດລົງມາ. ຍັງມີຫຼາຍວິທີທີ່ເຈົ້າບໍ່ເຂົ້າໃຈ, ຫຼາຍເລື່ອງທີ່ເຈົ້າບໍ່ມີຄວາມຮູ້. ເຈົ້າຊ່າງບໍ່ຮູ້ຫຍັງເລີຍ; ເຮົາຮູ້ວຸດທິພາວະ ແລະ ຂໍ້ບົກຜ່ອງຂອງເຈົ້າເປັນຢ່າງດີ. ສະນັ້ນ, ເຖິງແມ່ນວ່າຈະມີພຣະທຳຫຼາຍຂໍ້ທີ່ເຈົ້າບໍ່ສາມາດເຂົ້າໃຈໄດ້, ເຮົາກໍ່ຍັງເຕັມໃຈທີ່ຈະບອກຄວາມຈິງເຫຼົ່ານີ້ທີ່ເຈົ້າບໍ່ເຄີຍໄດ້ຮັບຮູ້ມາກ່ອນໃຫ້ແກ່ເຈົ້າ, ຍ້ອນເຮົາເປັນຫ່ວງຢູ່ສະເໝີວ່າ ໃນວຸດທິພາວະໃນປັດຈຸບັນ ເຈົ້າຈະສາມາດ

ຢືນໝັ້ນທ່ຽງໃນຄຳພະຍານຂອງເຈົ້າສຳລັບເຮົາ ຫຼື ບໍ່. ມັນບໍ່ແມ່ນວ່າ ເຮົາດູຖູກພວກເຈົ້າ; ພວກເຈົ້າທຸກຄົນເປັນສັດຮ້າຍທີ່ຍັງບໍ່ໄດ້ຜ່ານການຝຶກຝົນຢ່າງເປັນທາງການຂອງເຮົາ ແລະ ເຮົາບໍ່ສາມາດເຫັນໄດ້ຢ່າງແທ້ຈິງວ່າມີສະຫງ່າລາສີສໍ່າໃດໃນຕົວເຈົ້າ. ເຖິງວ່າເຮົາໄດ້ເສຍສະຫຼະກຳລັງຫຼາຍເພື່ອເຮັດພາລະກິດໃນຕົວເຈົ້າ, ອົງປະກອບດ້ານບວກໃນຕົວເບິ່ງຄືບໍ່ມີຢູ່ເລີຍແທ້ໆ ແລະ ອົງປະກອບດ້ານລົບສາມາດນັບດ້ວຍນິ້ວມືຂອງຄົນໜຶ່ງໄດ້ ແລະ ພຽງໃຊ້ເປັນພະຍານເພື່ອນຳຄວາມອັບອາຍໄປສູ່ຊາຕານ. ສິ່ງທີ່ຢູ່ໃນຕົວເຈົ້າເກືອບທັງໝົດແມ່ນພິດຂອງຊາຕານ. ເຈົ້າຫຼຽວເບິ່ງເຮົາຄ້າຍຄືກັບວ່າເຈົ້າຈະບໍ່ສາມາດຮັບເອົາຄວາມລອດພົ້ນໄດ້. ໃນຂະນະທີ່ບັນຫາຍັງຢູ່ທີ່ນັ້ນ, ເຮົາເບິ່ງການສະແດງອອກ ແລະ ການປະພຶດທີ່ຫຼາກຫຼາຍຂອງເຈົ້າ ແລະ ໃນທີ່ສຸດ ເຮົາກໍ່ຮູ້ວຸດທິພາວະທີ່ແທ້ຈິງຂອງເຈົ້າ. ນີ້ຄືເຫດຜົນທີ່ເຮົາເປັນຫ່ວງເຈົ້າຢູ່ສະເໝີວ່າ: ຖ້າຖືກປ່ອຍໃຫ້ດຳລົງຊີວິດຕາມລຳພັງ, ມະນຸດຈະໄດ້ດີກວ່າ ຫຼື ໄດ້ເທົ່າທຽມກັບສິ່ງທີ່ເຂົາເປັນຢູ່ໃນປັດຈຸບັນນີ້ບໍ? ວຸດທິພາວະທີ່ເປັນຄືກັບເດັກນ້ອຍຂອງເຈົ້າບໍ່ໄດ້ເຮັດໃຫ້ເຈົ້າວິຕົກກັງວົນບໍ? ເຈົ້າສາມາດເປັນຄືຄົນອິດສະຣາເອນທີ່ຖືກເລືອກໄດ້ແທ້ບໍ ນັ້ນກໍ່ຄືຄົນທີ່ຈົງຮັກພັກດີຕໍ່ເຮົາ ແລະ ເຮົາຜູ້ດຽວຢູ່ຕະຫຼອດເວລາ? ສິ່ງທີ່ເປີດເຜີຍໃນຕົວເຈົ້າບໍ່ແມ່ນຄວາມຫາຍະນະຂອງເດັກນ້ອຍຜູ້ທີ່ຫຼົງທາງຈາກພໍ່ແມ່ຂອງພວກເຂົາ, ແຕ່ເປັນຄວາມໂຫດຮ້າຍທີ່ອອກມາຈາກສັດທີ່ຢູ່ໄກຈາກແສ້ຂອງເຈົ້ານາຍພວກມັນ. ພວກເຈົ້າຄວນຮູ້ທຳມະຊາດຂອງເຈົ້າເອງ ເຊິ່ງຍັງເປັນຄວາມອ່ອນແອທີ່ພວກເຈົ້າທຸກຄົນມີຮ່ວມກັນ; ມັນຄືຄວາມເຈັບປ່ວຍທີ່ພວກເຈົ້າທຸກຄົນມີ. ສະນັ້ນ, ຄຳແນະນຳພຽງຢ່າງດຽວຂອງເຮົາສຳລັບເຈົ້າໃນມື້ນີ້ກໍ່ຄືການຍຶດໝັ້ນເປັນພະຍານໃຫ້ແກ່ເຮົາ. ບໍ່ວ່າໃນສະຖານະການໃດກໍ່ຕາມ, ຢ່າປ່ອຍໃຫ້ຄວາມເຈັບປ່ວຍເດີມໆປາກົດຂຶ້ນມາອີກຄັ້ງ. ການເປັນພະຍານຄືສິ່ງທີ່ສຳຄັນທີ່ສຸດ, ມັນຄືຫົວໃຈໃນພາລະກິດຂອງເຮົາ. ເຈົ້າຄວນຍອມຮັບພຣະທຳຂອງເຮົາ ຄືດັ່ງທີ່ມາຣີອາໄດ້ຍອມຮັບການເປີດເຜີຍຂອງພຣະເຢໂຮວາທີ່ມາປາກົດໃນຄວາມຝັນຂອງນາງ: ໂດຍການເຊື່ອ ແລະ ການເຊື່ອຟັງໃນພາຍຫຼັງ. ມີແຕ່ສິ່ງນີ້ເທົ່ານັ້ນຈຶ່ງມີຄຸນສົມບັດເປັນຄວາມບໍລິສຸດ. ຍ້ອນເຈົ້າເປັນຜູ້ທີ່ໄດ້ຍິນພຣະທຳຂອງເຮົາຫຼາຍທີ່ສຸດ, ເປັນຜູ້ທີ່ໄດ້ຮັບພອນຈາກເຮົາຫຼາຍທີ່ສຸດ. ເຮົາໄດ້ມອບສິ່ງທີ່ມີຄຸນຄ່າທັງໝົດຂອງເຮົາໃຫ້ແກ່ເຈົ້າ, ເຮົາໄດ້ປະທານທຸກສິ່ງທຸກຢ່າງໃຫ້ແກ່ເຈົ້າ, ແຕ່ເຈົ້າກໍ່ມີສະຖານະທີ່ແຕກຕ່າງກັນຫຼາຍຈາກຄົນອິດສະຣາເອນ; ເຈົ້າຢູ່ຫ່າງກັນຄົນລະໂລກແທ້ໆ. ແຕ່ເມື່ອທຽບກັບພວກເຂົາແລ້ວ, ເຈົ້າແມ່ນໄດ້ຮັບຫຼາຍກວ່າພວກເຂົາຫຼາຍເທົ່າ; ໃນຂະນະທີ່ພວກເຂົາລໍຖ້າຢ່າງໝົດຫວັງສຳລັບການປາກົດຕົວຂອງເຮົາ, ເຈົ້າໃຊ້ເວລາຢ່າງມີຄວາມສຸກກັບເຮົາ, ແບ່ງປັນຄວາມອຸດົມສົມບູນຂອງເຮົາ. ຍ້ອນຄວາມແຕກຕ່າງນີ້, ແມ່ນຫຍັງໃຫ້ສິດເຈົ້າໃນການຈົ່ມ ແລະ ຖຽງກັນກັບເຮົາ ແລະ ຮຽກຮ້ອງເອົາສ່ວນແບ່ງຈາກຊັບສິນຂອງເຮົາ? ເຈົ້າຍັງໄດ້ບໍ່ພໍອີກບໍ? ເຮົາເອົາໃຫ້ເຈົ້າຫຼາຍແລ້ວ ແຕ່ສິ່ງທີ່ເຈົ້າໃຫ້ເຮົາເປັນການຕອບແທນຄືຄວາມໂສກເສົ້າເສຍໃຈ ແລະ ຄວາມວິຕົກກັງວົນ ແລະ ຄວາມແຄ້ນໃຈ ແລະ ຄວາມບໍ່ພໍໃຈທີ່ບໍ່ສາມາດທົນໄດ້. ເຈົ້າເປັນຕາລັງກຽດຫຼາຍ, ແຕ່ເຈົ້າຍັງໜ້າສົມເພດອີກ, ສະນັ້ນ ເຮົາຈຶ່ງບໍ່ມີທາງເລືອກນອກກືນຄວາມແຄ້ນໃຈຂອງເຮົາທັງໝົດ ແລະ ສະແດງຄວາມຄັດຄ້ານຂອງເຮົາຕໍ່ເຈົ້າຊ້ຳແລ້ວຊ້ຳອີກ. ຫຼາຍພັນປີກັບການດຳເນີນພາລະກິດ, ເຮົາບໍ່ເຄີຍໂຕ້ຖຽງກັບມະນຸດຊາດ

ຈັກເທື່ອ ເພາະເຮົາໄດ້ຄົ້ນພົບວ່າ ຕະຫຼອດການພັດທະນາຂອງມະນຸດຊາດ, ມັນເປັນພຽງ "ການຫຼອກລວງ" ໃນບັນດາພວກເຈົ້າທີ່ກາຍເປັນສິ່ງທີ່ມີຊື່ສຽງຫຼາຍທີ່ສຸດ, ເປັນດັ່ງມໍລະດົກລ້ຳຄ່າທີ່ບັນພະບຸລຸດທີ່ມີຊື່ສຽງໃນຍຸກບູຮານໄດ້ປະໄວ້ໃຫ້ເຈົ້າ. ເຮົາຊັງພວກຊົ່ວພວກໝູ ແລະ ໝາທີ່ບໍ່ມີຄວາມເປັນມະນຸດນັ້ນ. ເຈົ້າຂາດຈິດສຳນຶກຫຼາຍເກີນໄປ! ເຈົ້າມີນິໄສທີ່ຕໍ່າຊາມເກີນໄປ! ຫົວໃຈຂອງພວກເຈົ້າກໍ່ແຂງກະດ້າງເກີນໄປ! ຖ້າເຮົາຕ້ອງເອົາພຣະທຳ ແລະ ພາລະກິດດັ່ງກ່າວໃຫ້ຄົນອິດສະຣາເອນ, ເຮົາກໍ່ຄົງຈະໄດ້ຮັບສະຫງ່າລາສີແຕ່ດົນແລ້ວ. ແຕ່ໃນບັນດາພວກເຈົ້າ, ນີ້ຄືສິ່ງທີ່ບໍ່ສາມາດບັນລຸໄດ້; ໃນບັນດາພວກເຈົ້າແມ່ນມີແຕ່ຄວາມບໍ່ສົນໃຈທີ່ໂຫດຮ້າຍ, ຫົວໃຈທີ່ເຢັນຊາຂອງພວກເຈົ້າ ແລະ ຄຳແກ້ໂຕຂອງພວກເຈົ້າ. ພວກເຈົ້າຂາດຄວາມຮູ້ສຶກ ແລະ ບໍ່ມີຄຸນຄ່າຫຍັງເລີຍ!

ເຈົ້າຄວນອຸທິດທັງໝົດຂອງເຈົ້າໃຫ້ແກ່ພາລະກິດຂອງເຮົາ. ເຈົ້າຄວນເຮັດພາລະກິດທີ່ເປັນປະໂຫຍດຕໍ່ເຮົາ. ເຮົາເຕັມໃຈອະທິບາຍໃຫ້ແກ່ເຈົ້າກ່ຽວກັບທຸກສິ່ງທຸກຢ່າງທີ່ເຈົ້າຍັງບໍ່ເຂົ້າໃຈ ເພື່ອວ່າເຈົ້າຈະສາມາດໄດ້ຮັບທຸກສິ່ງທີ່ເຈົ້າຂາດຈາກເຮົາ. ເຖິງແມ່ນວ່າຄວາມບົກຜ່ອງຂອງເຈົ້າມີຫຼາຍຈົນນັບບໍ່ໄດ້, ເຮົາກໍ່ເຕັມໃຈທີ່ຈະສືບຕໍ່ເຮັດພາລະກິດທີ່ເຮົາຄວນເຮັດໃນຕົວເຈົ້າ ໂດຍມອບຄວາມເມດຕາຄັ້ງສຸດທ້າຍໃຫ້ແກ່ເຈົ້າ ເພື່ອວ່າເຈົ້າອາດໄດ້ຮັບປະໂຫຍດຈາກເຮົາ ແລະ ໄດ້ຮັບສະຫງ່າລາສີທີ່ບໍ່ມີຢູ່ໃນຕົວເຈົ້າ ແລະ ເປັນສິ່ງທີ່ໂລກຍັງບໍ່ເຄີຍເຫັນ. ເຮົາໄດ້ເຮັດພາລະກິດເປັນເວລາຫຼາຍປີ ແຕ່ກໍ່ບໍ່ມີມະນຸດຜູ້ໃດທີ່ຮູ້ຈັກເຮົາ. ເຮົາຕ້ອງການບອກພວກເຈົ້າກ່ຽວກັບຄວາມລັບທີ່ເຮົາບໍ່ເຄີຍບອກໃຜມາກ່ອນ.

ໃນບັນດາມະນຸດທັງຫຼາຍ, ເຮົາແມ່ນພຣະວິນຍານທີ່ພວກເຂົາບໍ່ສາມາດແນມເຫັນໄດ້, ເປັນພຣະວິນຍານທີ່ພວກເຂົາຈະບໍ່ສາມາດມີປະຕິສຳພັນນຳໄດ້. ຍ້ອນພາລະກິດຂອງເຮົາທັງສາມຂັ້ນຕອນເທິງແຜ່ນດິນໂລກ (ການສ້າງໂລກ, ການໄຖ່ບາບ ແລະ ການທຳລາຍລ້າງ), ເຮົາຈຶ່ງໄດ້ປາກົດໃນທ່າມກາງພວກເຂົາໃນເວລາທີ່ແຕກຕ່າງກັນ (ບໍ່ເຄີຍປາກົດຢ່າງເປີດເຜີຍ) ເພື່ອເຮັດພາລະກິດຂອງເຮົາໃນທ່າມກາງພວກເຂົາ. ຄັ້ງທຳອິດທີ່ເຮົາປາກົດໃນທ່າມກາງມະນຸດແມ່ນຢູ່ໃນຍຸກແຫ່ງການໄຖ່ບາບ. ແນ່ນອນ, ເຮົາມາປາກົດໃນຄອບຄົວຂອງຄົນຢິວ; ສະນັ້ນ, ຄົນທຳອິດທີ່ໄດ້ເຫັນພຣະເຈົ້າລົງມາສູ່ແຜ່ນດິນໂລກແມ່ນຄົນຢິວ. ເຫດຜົນທີ່ເຮົາເຮັດພາລະກິດນີ້ດ້ວຍຕົນເອງກໍ່ເພາະວ່າເຮົາຕ້ອງການໃຊ້ເນື້ອໜັງທີ່ບັງເກີດເປັນມະນຸດຂອງເຮົາເພື່ອເປັນເຄື່ອງບູຊາແທນຄວາມຜິດບາບໃນພາລະກິດແຫ່ງການໄຖ່ບາບຂອງເຮົາ. ສະນັ້ນ, ຄົນທຳອິດທີ່ເຫັນເຮົາແມ່ນຄົນຢິວໃນຍຸກແຫ່ງພຣະຄຸນ. ນັ້ນເປັນຄັ້ງທຳອິດທີ່ເຮົາເຮັດພາລະກິດໃນເນື້ອໜັງ. ໃນຍຸກແຫ່ງລາຊະອານາຈັກ, ພາລະກິດຂອງເຮົາແມ່ນເພື່ອເອົາຊະນະ ແລະ ເຮັດໃຫ້ສົມບູນແບບ, ສະນັ້ນ ເຮົາຈຶ່ງໄດ້ເຮັດພາລະກິດແຫ່ງການລ້ຽງດູຂອງເຮົາໃນເນື້ອໜັງ. ນີ້ແມ່ນເທື່ອທີສອງທີ່ເຮົາໄດ້ເຮັດພາລະກິດໃນເນື້ອໜັງ. ໃນສອງຂັ້ນຕອນສຸດທ້າຍໃນພາລະກິດ, ສິ່ງທີ່ຜູ້ຄົນພົວພັນກໍ່ບໍ່ແມ່ນພຣະວິນຍານທີ່ບໍ່ສາມາດແນມເຫັນ ແລະ ບໍ່ສາມາດຈັບຕ້ອງໄດ້ອີກຕໍ່ໄປ, ແຕ່ເປັນບຸກຄົນທີ່ເປັນພຣະວິນຍານເຊິ່ງໄດ້ກາຍເປັນຈິງໃນເນື້ອໜັງ. ສະນັ້ນ ໃນສາຍຕາຂອງມະນຸດ, ເຮົາໄດ້ກາຍມາເປັນມະນຸດອີກຄັ້ງ, ບໍ່ມີລັກສະນະ ແລະ ຄວາມຮູ້ສຶກຂອງພຣະເຈົ້າອີກ. ຍິ່ງໄປກວ່ານັ້ນ, ພຣະເຈົ້າທີ່ຜູ້ຄົນໄດ້ເຫັນບໍ່ແມ່ນມີແຕ່ເພດຊາຍເທົ່ານັ້ນ, ແຕ່ຍັງເປັນເພດຍິງນຳ ເຊິ່ງເປັນ

ສິ່ງທີ່ເຮັດໃຫ້ພວກເຂົາປະຫຼາດໃຈ ແລະ ເຂົ້າໃຈຍາກ. ຫຼາຍຄັ້ງຫຼາຍຄາວ, ພາລະກິດທີ່ພິເສດຂອງເຮົາໄດ້ທຳລາຍຄວາມເຊື່ອເກົ່າໆທີ່ມີມາເປັນເວລາຫຼາຍໆປີ. ຜູ້ຄົນຕົກຕະລຶງ! ພຣະເຈົ້າບໍ່ພຽງແຕ່ພຣະວິນຍານບໍລິສຸດ, ພຣະວິນຍານ, ພຣະວິນຍານທີ່ມີຄວາມຮຸນແຮງຫຼາຍຂຶ້ນເຖິງເຈັດເທົ່າ ຫຼື ພຣະວິນຍານທີ່ຮອບຮູ້, ແຕ່ຍັງເປັນມະນຸດ ນັ້ນກໍ່ຄື ມະນຸດທີ່ທຳມະດາ, ມະນຸດທຳມະດາທີ່ພິເສດ. ພຣະອົງບໍ່ພຽງແຕ່ເປັນເພດຊາຍເທົ່ານັ້ນ, ແຕ່ຍັງເປັນເພດຍິງອີກດ້ວຍ. ພຣະອົງຄ້າຍຄືກັນຢູ່ບ່ອນທີ່ວ່າພຣະອົງເກີດໃນມະນຸດ ແລະ ມີຄວາມແຕກຕ່າງກັນຢູ່ບ່ອນວ່າອົງໜຶ່ງເກີດຈາກພຣະວິນຍານບໍລິສຸດ ແລະ ອີກອົງໜຶ່ງເກີດຈາກມະນຸດ ເຖິງຢ່າງໃດກໍ່ຕາມກໍ່ມາຈາກພຣະວິນຍານໂດຍກົງ. ພຣະອົງທັງສອງມີຄວາມຄ້າຍຄືກັນຢູ່ບ່ອນວ່າເນື້ອໜັງທີ່ບັງເກີດເປັນມະນຸດທັງສອງເຮັດພາລະກິດຂອງພຣະເຈົ້າພຣະບິດາ ແລະ ມີຄວາມແຕກຕ່າງກັນຢູ່ບ່ອນວ່າອົງໜຶ່ງປະຕິບັດພາລະກິດແຫ່ງການໄຖ່ບາບ ໃນຂະນະທີ່ອີກອົງໜຶ່ງປະຕິບັດພາລະກິດແຫ່ງການເອົາຊະນະ. ພຣະອົງທັງສອງເປັນຕົວແທນໃຫ້ກັບພຣະເຈົ້າພຣະບິດາ, ແຕ່ອົງໜຶ່ງເປັນພຣະຜູ້ໄຖ່ທີ່ເຕັມໄປດ້ວຍຄວາມຮັກຄວາມເມດຕາ ແລະ ຄວາມກະລຸນາ ແລະ ອີກອົງເປັນພຣະເຈົ້າແຫ່ງຄວາມຊອບທຳທີ່ເຕັມໄປດ້ວຍຄວາມໂກດຮ້າຍ ແລະ ການພິພາກສາ. ອົງໜຶ່ງແມ່ນຜູ້ບັນຊາການສູງສຸດທີ່ລິເລີ່ມພາລະກິດແຫ່ງການໄຖ່ບາບ ໃນຂະນະທີ່ອີກອົງເປັນພຣະເຈົ້າຊອບທຳທີ່ເຮັດສຳເລັດພາລະກິດແຫ່ງການເອົາຊະນະ. ອົງໜຶ່ງຄືຈຸດເລີ່ມຕົ້ນ ແລະ ອີກອົງໜຶ່ງຄືຈຸດຈົບ. ອົງໜຶ່ງເປັນເນື້ອໜັງທີ່ບໍ່ມີບາບ, ສ່ວນອີກອົງໜຶ່ງເປັນເນື້ອໜັງທີ່ສຳເລັດການໄຖ່ບາບ, ສືບຕໍ່ພາລະກິດ ແລະ ບໍ່ເຄີຍເຮັດບາບຈັກເທື່ອ. ພຣະອົງທັງສອງຄືພຣະວິນຍານອົງດຽວກັນ ແຕ່ພຣະອົງສະຖິດຢູ່ໃນເນື້ອໜັງທີ່ແຕກຕ່າງກັນ ແລະ ເກີດຢູ່ໃນສະຖານທີ່ແຕກຕ່າງກັນ ແລະ ພຣະອົງຖືກແຍກອອກຈາກກັນດ້ວຍການເວລາຫຼາຍພັນປີ. ເຖິງຢ່າງໃດກໍ່ຕາມ, ພາລະກິດທັງໝົດຂອງພວກພຣະອົງສອດຄ່ອງກັນ, ບໍ່ເຄີຍຂັດແຍ້ງກັນ ແລະ ສາມາດເວົ້າເຖິງໃນລັກສະນະດຽວກັນ. ພຣະອົງທັງສອງເປັນຄົນ ແຕ່ອົງໜຶ່ງແມ່ນເດັກນ້ອຍເພດຊາຍ ແລະ ອີກອົງໜຶ່ງແມ່ນເດັກນ້ອຍເພດຍິງ. ສຳລັບເວລາຫຼາຍປີມານີ້, ສິ່ງທີ່ຜູ້ຄົນໄດ້ເຫັນບໍ່ແມ່ນພຽງແຕ່ພຣະວິນຍານ ແລະ ບໍ່ແມ່ນພຽງແຕ່ມະນຸດຄົນໜຶ່ງ ເຊິ່ງເປັນເພດຊາຍ, ແຕ່ຍັງແມ່ນຫຼາຍສິ່ງຫຼາຍຢ່າງທີ່ບໍ່ສອດຄ່ອງກັບຄວາມຄິດຂອງມະນຸດ; ດ້ວຍເຫດນັ້ນ ມະນຸດຈຶ່ງບໍ່ສາມາດເຂົ້າໃຈເຮົາໄດ້ຢ່າງເຕັມທີ່. ພວກເຂົາຍັງຄົງເຊື່ອເຮົາເຄິ່ງໜຶ່ງ ແລະ ສົງໄສອີກເຮົາເຄິ່ງໜຶ່ງ, ຄືກັບວ່າເຮົາມີຕົວຕົນ ແຕ່ຍັງເປັນຄວາມຝັນທີ່ເປັນພາບລວງ, ນັ້ນຄືເຫດຜົນທີ່ຜູ້ຄົນຍັງບໍ່ຮູ້ວ່າພຣະເຈົ້າແມ່ນຫຍັງຈົນມາຮອດປັດຈຸບັນ. ເຈົ້າສາມາດສະຫຼຸບເປັນປະໂຫຍກງ່າຍໆໜຶ່ງປະໂຫຍດໃຫ້ເຮົາໄດ້ບໍ່? ເຈົ້າກ້າເວົ້າແທ້ໆບໍວ່າ "ພຣະເຢຊູບໍ່ແມ່ນຜູ້ໃດນອກຈາກພຣະເຈົ້າ ແລະ ພຣະເຈົ້າກໍ່ບໍ່ແມ່ນຜູ້ໃດນອກຈາກພຣະເຢຊູ"? ເຈົ້າກ້າເວົ້າແທ້ໆບໍວ່າ "ພຣະເຈົ້າບໍ່ແມ່ນຜູ້ໃດນອກຈາກພຣະວິນຍານ ແລະ ພຣະວິນຍານບໍ່ແມ່ນຜູ້ໃດນອກຈາກພຣະເຈົ້າ"? ເຈົ້າເວົ້າໄດ້ຢ່າງສະບາຍບໍວ່າ "ພຣະເຈົ້າເປັນພຽງແຕ່ມະນຸດທີ່ສວມໃສ່ເນື້ອໜັງ"? ເຈົ້າມີຄວາມກ້າຫານແທ້ໆທີ່ຈະຢືນຢັນບໍວ່າ "ພາບລັກຂອງພຣະເຢຊູເປັນພາບລັກອັນຍິ່ງໃຫຍ່ຂອງພຣະເຈົ້າ"? ເຈົ້າສາມາດໃຊ້ຄວາມຄ່ອງແຄ້ວຂອງເຈົ້າເພື່ອອະທິບາຍຢ່າງລະອຽດກ່ຽວກັບອຸປະນິໄສ ແລະ ພາບລັກຂອງພຣະເຈົ້າບໍ? ເຈົ້າກ້າເວົ້າແທ້ໆບໍວ່າ "ພຣະເຈົ້າໄດ້ສ້າງ

ເພດຊາຍພາບລັກຂອງພຣະອົງເອງເທົ່ານັ້ນ, ແຕ່ບໍ່ແມ່ນເພດຍິງ"? ຖ້າເຈົ້າເວົ້າແບບນີ້, ແລ້ວມັນກໍ່ຈະບໍ່ມີແມ່ຍິງໃນບັນດາຜູ້ທີ່ເຮົາໄດ້ເລືອກ, ແຮງໄກທີ່ແມ່ຍິງຈະເປັນຊົນຊັ້ນໜຶ່ງໃນມະນຸດຊາດ. ຕອນນີ້ເຈົ້າຮູ້ແທ້ໆແລ້ວບໍວ່າພຣະເຈົ້າແມ່ນຫຍັງ? ພຣະເຈົ້າແມ່ນມະນຸດບໍ? ພຣະເຈົ້າເປັນພຣະວິນຍານບໍ? ພຣະເຈົ້າເປັນຜູ້ຊາຍແທ້ໆບໍ? ມີພຽງແຕ່ພຣະເຢຊູເທົ່ານັ້ນບໍທີ່ສາມາດເຮັດສຳເລັດພາລະກິດທີ່ເຮົາຕ້ອງເຮັດ? ຖ້າເຈົ້າເລືອກເອົາພຽງໜຶ່ງຂໍ້ຈາກຂ້າງເທິງນີ້ເພື່ອສະຫຼຸບແກ່ນແທ້ຂອງເຮົາ, ແລ້ວເຈົ້າກໍ່ຈະເປັນຜູ້ເຊື່ອທີ່ຈິງຮັກພັກດີຢ່າງໂງ່ຈ້າຫຼາຍ. ຖ້າເຮົາເຮັດພາລະກິດດັ່ງເນື້ອໜັງທີ່ບັງເກີດເປັນເນື້ອໜັງມະນຸດໜຶ່ງຄັ້ງ ແລະ ພຽງຄັ້ງດຽວເທົ່ານັ້ນ, ພວກເຈົ້າຈະຈຳກັດເຮົາບໍ? ເຈົ້າສາມາດເຂົ້າໃຈເຮົາຢ່າງຖີ່ຖ້ວນແທ້ໆໂດຍແນມເບິ່ງພຽງແຕ່ຄັ້ງດຽວບໍ? ເຈົ້າສາມາດສະຫຼຸບເຮົາແທ້ໆໂດຍອີງໃສ່ສິ່ງທີ່ເຈົ້າໄດ້ຮັບການເປີດເຜີຍໃນຊ່ວງເວລາທີ່ເຈົ້າມີຊີວິດບໍ? ຖ້າເຮົາໄດ້ເຮັດພາລະກິດທີ່ຄ້າຍຄືກັນໃນການບັງເກີດເປັນມະນຸດຂອງເຮົາທັງສອງຄັ້ງ, ເຈົ້າຈະຮັບຮູ້ເຮົາແນວໃດ? ເຈົ້າຈະປ່ອຍໃຫ້ເຮົາຖືກຕອກຢູ່ເທິງໄມ້ກາງແຂນຕະຫຼອດການບໍ? ພຣະເຈົ້າງ່າຍຄືດັ່ງທີ່ເຈົ້າກ່າວອ້າງບໍ?

ເຖິງແມ່ນວ່າຄວາມເຊື່ອຂອງເຈົ້າຈິງໃຈຫຼາຍ, ບໍ່ມີຜູ້ໃດໃນບັນດາພວກເຈົ້າທີ່ສາມາດອະທິບາຍເຮົາຢ່າງລະອຽດ, ບໍ່ມີຜູ້ໃດໃນບັນດາພວກເຈົ້າທີ່ສາມາດໃຫ້ຄຳພະຍານຢ່າງຄົບຖ້ວນຕໍ່ຂໍ້ແທ້ຈິງທັງໝົດທີ່ເຈົ້າເຫັນ. ໃຫ້ຄິດລອງເບິ່ງ: ມື້ນີ້ ພວກເຈົ້າສ່ວນໃຫຍ່ປະຖິ້ມໜ້າທີ່ຂອງພວກເຈົ້າ ແລ້ວສະແຫວງຫາເນື້ອໜັງແທນ, ເຮັດໃຫ້ເນື້ອໜັງພໍໃຈ ແລະ ເພີດເພີນກັບເນື້ອໜັງຢ່າງໂລບມາກ. ພວກເຈົ້າມີຄວາມຈິງພຽງໜ້ອຍດຽວ. ແລ້ວພວກເຈົ້າຈະສາມາດເປັນພະຍານ ໃນທຸກສິ່ງທີ່ພວກເຈົ້າໄດ້ເຫັນແນວໃດ? ພວກເຈົ້າໝັ້ນໃຈແທ້ບໍວ່າ ພວກເຈົ້າສາມາດເປັນພະຍານໃຫ້ເຮົາໄດ້? ຖ້າມື້ໜຶ່ງມາເຖິງເມື່ອເຈົ້າບໍ່ສາມາດເປັນພະຍານໃຫ້ກັບທຸກສິ່ງທີ່ເຈົ້າເຫັນໃນມື້ນີ້ໄດ້, ແລ້ວເຈົ້າກໍ່ຈະສູນເສຍໜ້າທີ່ຂອງສິ່ງຖືກສ້າງ ແລະ ມັນຈະບໍ່ມີຄວາມໝາຍຫຍັງໃນການເປັນຢູ່ຂອງເຈົ້າ. ເຈົ້າຈະບໍ່ມີຄຸນຄ່າໃນການເປັນມະນຸດ. ມັນສາມາດເວົ້າໄດ້ວ່າ ເຈົ້າຈະບໍ່ແມ່ນມະນຸດ! ເຮົາໄດ້ເຮັດພາລະກິດໃນຕົວເຈົ້າເປັນຈຳນວນຫຼວງຫຼາຍ, ແຕ່ເພາະວ່າ ໃນປັດຈຸບັນນີ້ ເຈົ້າບໍ່ໄດ້ຮຽນຮູ້ຫຍັງ, ບໍ່ຮູ້ຫຍັງເລີຍ ແລະ ໃຊ້ແຮງງານຂອງເຈົ້າຢ່າງບໍ່ມີປະສິດທິພາບ, ເມື່ອມັນຮອດເວລາທີ່ເຮົາຕ້ອງຂະຫຍາຍພາລະກິດຂອງເຮົາ, ເຈົ້າກໍ່ຈະແນມເບິ່ງດ້ວຍຄວາມວ່າງເປົ່າ, ລີ້ນພັນກັນ ແລະ ບໍ່ມີປະໂຫຍດທີ່ສຸດ. ແລ້ວນັ້ນຈະບໍ່ເຮັດໃຫ້ເຈົ້າເປັນຄົນບາບຕະຫຼອດເວລາບໍ? ເມື່ອເວລານັ້ນມາເຖິງ, ເຈົ້າຈະບໍ່ຮູ້ສຶກກິນແໜງທີ່ສຸດບໍ? ເຈົ້າຈະບໍ່ຈົມຢູ່ກັບຄວາມຜິດຫວັງບໍ? ພາລະກິດທັງໝົດຂອງເຮົາໃນປັດຈຸບັນບໍ່ໄດ້ເຮັດຍ້ອນຄວາມຂີ້ຄ້ານ ແລະ ຄວາມເບື່ອໜ່າຍ, ແຕ່ເພື່ອວາງຮາກຖານໃຫ້ແກ່ພາລະກິດຂອງເຮົາໃນອະນາຄົດ. ມັນບໍ່ແມ່ນວ່າເຮົາຈົນຕາແຈ ແລະ ຕ້ອງໄດ້ຄິດຫາສິ່ງໃໝ່ໆ. ເຈົ້າຄວນເຂົ້າໃຈພາລະກິດທີ່ເຮົາເຮັດ; ມັນບໍ່ແມ່ນສິ່ງທີ່ເຮັດໂດຍເດັກນ້ອຍຫຼິ້ນໃນຖະໜົນ, ແຕ່ເປັນພາລະກິດທີ່ເຮັດໃນນາມພຣະບິດາຂອງເຮົາ. ເຈົ້າຄວນຮູ້ວ່າ ບໍ່ແມ່ນມີແຕ່ເຮົາທີ່ກຳລັງເຮັດພາລະກິດນີ້ດ້ວຍຕົນເອງ; ກົງກັນຂ້າມ, ເຮົາເປັນຕົວແທນໃຫ້ແກ່ພຣະບິດາຂອງເຮົາ. ໃນຂະນະດຽວກັນ, ບົດບາດຂອງເຈົ້າແມ່ນການຕິດຕາມ, ເຊື່ອຟັງ, ປ່ຽນແປງ ແລະ ເປັນພະຍານຢ່າງເຄັ່ງຄັດ. ສິ່ງທີ່ເຈົ້າຄວນເຂົ້າໃຈຄືເຫດຜົນທີ່ເຈົ້າຄວນເຊື່ອໃນຕົວເຮົາ; ນີ້ແມ່ນຄຳຖາມທີ່

ສຳຄັນທີ່ສຸດສຳລັບພວກເຈົ້າແຕ່ລະຄົນທີ່ຈະຕ້ອງເຂົ້າໃຈ. ໂດຍເຫັນແກ່ສະຫງ່າລາສີຂອງພຣະອົງ, ພຣະບິດາຂອງເຮົາໄດ້ກຳນົດເຈົ້າທຸກຄົນໄວ້ລ່ວງໜ້າສຳລັບເຮົາ ນັບແຕ່ເວລາທີ່ພຣະອົງຊົງສ້າງໂລກ. ມັນແມ່ນເພື່ອປະໂຫຍດໃນພາລະກິດຂອງເຮົາ ແລະ ເພື່ອເຫັນແກ່ສະຫງ່າລາສີຂອງພຣະອົງ, ພຣະອົງຈຶ່ງໄດ້ກຳນົດເຈົ້າລ່ວງໜ້າ. ມັນເປັນຍ້ອນພຣະບິດາຂອງເຮົາ, ເຈົ້າຈຶ່ງເຊື່ອໃນເຮົາ; ມັນເປັນຍ້ອນການກຳນົດລ່ວງໜ້າຂອງພຣະບິດາຂອງເຮົາ, ເຈົ້າຈຶ່ງຕິດຕາມເຮົາ. ບໍ່ມີສິ່ງໃດທີ່ເຈົ້າເລືອກເຮັດດ້ວຍຕົວເອງ. ສິ່ງທີ່ສຳຄັນໄປກວ່ານັ້ນແມ່ນເຈົ້າຕ້ອງເຂົ້າໃຈວ່າ ເຈົ້າແມ່ນສິ່ງທີ່ພຣະບິດາຂອງເຮົາປະທານໃຫ້ແກ່ເຮົາສຳລັບຈຸດປະສົງໃນການເປັນພະຍານໃຫ້ແກ່ເຮົາ. ເພາະພຣະອົງໄດ້ມອບເຈົ້າໃຫ້ແກ່ເຮົາພ້ອມທັງລັກສະນະ ແລະ ພຣະທຳທີ່ເຮົາສັ່ງສອນເຈົ້າ, ເພາະມັນແມ່ນໜ້າທີ່ຂອງເຈົ້າທີ່ຈະຕ້ອງປະຕິບັດຕາມແນວທາງຂອງເຮົາ. ນີ້ຄືຈຸດປະສົງເດີມໃນຄວາມເຊື່ອຂອງເຈົ້າໃນເຮົາ. ສະນັ້ນ, ເຮົາຈຶ່ງເວົ້າກັບເຈົ້າແບບນີ້ວ່າ: ເຈົ້າເປັນພຽງຄົນທີ່ພຣະບິດາຂອງເຮົາປະທານໃຫ້ແກ່ເຮົາເພື່ອໃຫ້ປະຕິບັດຕາມແນວທາງຂອງເຮົາ. ເຖິງຢ່າງໃດກໍ່ຕາມ, ເຈົ້າພຽງແຕ່ເຊື່ອໃນຕົວເຮົາເທົ່ານັ້ນ; ເຈົ້າບໍ່ໄດ້ມາຈາກເຮົາເພາະເຈົ້າບໍ່ໄດ້ມາຈາກຄອບຄົວອິດສະຣາເອນ ແລະ ເປັນພັກພວກຂອງງູພິດຈາກຍຸກບູຮານແທນ. ສິ່ງທີ່ເຮົາຂໍໃຫ້ເຈົ້າເຮັດແມ່ນການເປັນພະຍານໃຫ້ເຮົາ, ແຕ່ມື້ນີ້ ເຈົ້າຕ້ອງຍ່າງໃນຫົນທາງຂອງເຮົາ. ທັງໝົດນີ້ກໍ່ແມ່ນເພື່ອເຫັນແກ່ຄຳພະຍານໃນອະນາຄົດ. ຖ້າເຈົ້າເຮັດໜ້າທີ່ເປັນພຽງແຕ່ຄົນທີ່ຮັບຟັງແນວທາງຂອງເຮົາເທົ່ານັ້ນ, ແລ້ວເຈົ້າກໍ່ຈະບໍ່ມີຄຸນຄ່າ ແລະ ຄວາມໝາຍໃນການທີ່ພຣະບິດາຂອງເຮົາໄດ້ປະທານເຈົ້າໃຫ້ແກ່ເຮົາກໍ່ຈະສູນເສຍໄປ. ສິ່ງທີ່ເຮົາຢືນຢັນຢາກບອກເຈົ້າກໍ່ຄື: "ເຈົ້າຄວນເດີນຕາມແນວທາງຂອງເຮົາ".

# ການເປັນຄົນທີ່ແທ້ຈິງໝາຍເຖິງຫຍັງ

ມັນຄືໜ້າທີ່ຂອງເຮົາຢູ່ສະເໝີທີ່ຈະຄຸ້ມຄອງມະນຸດ. ຍິ່ງໄປກວ່ານັ້ນ, ການເອົາຊະນະມະນຸດແມ່ນສິ່ງທີ່ເຮົາກຳນົດໄວ້ລ່ວງໜ້າເມື່ອເຮົາສ້າງໂລກ. ຜູ້ຄົນອາດຈະບໍ່ຮູ້ວ່າ ເຮົາຈະເອົາຊະນະມະນຸດໃນຍຸກສຸດທ້າຍຢ່າງສົມບູນ ຫຼື ການເອົາຊະນະຜູ້ທີ່ກະບົດໃນທ່າມກາງມະນຸດຊາດແມ່ນຫຼັກຖານໃນການເອົາຊະນະຊາຕານຂອງເຮົາ. ແຕ່ເມື່ອເວລາສັດຕູຂອງເຮົາໄດ້ມາສູ້ຮົບກັບເຮົາ, ເຮົາກໍໄດ້ບອກມັນແລ້ວວ່າ ເຮົາຈະເອົາຊະນະຜູ້ທີ່ຊາຕານໄດ້ຈັບກຸມໄປເປັນສະເລີຍ ແລະ ເຮັດໃຫ້ເປັນລູກຂອງມັນ ເຊິ່ງເປັນຜູ້ຮັບໃຊ້ທີ່ຈົງຮັກພັກດີ ທີ່ເຝົ້າເບິ່ງເຮືອນຂອງມັນ. ຄວາມໝາຍດັ້ງເດີມຂອງການເອົາຊະນະກໍຄືການປາບ, ການເຮັດໃຫ້ອັບອາຍ; ໃນພາສາຂອງຊາວອິດສະຣາເອນ, ມັນໝາຍເຖິງການເອົາຊະນະຢ່າງສິ້ນເຊີງ, ການທຳລາຍ ແລະ ເຮັດໃຫ້ບໍ່ສາມາດຕໍ່ຕ້ານເຮົາໄດ້ອີກຕໍ່ໄປ. ແຕ່ໃນປັດຈຸບັນ ເມື່ອຖືກນຳໃຊ້ໃນທ່າມກາງພວກເຈົ້າ ແມ່ນໝາຍເຖິງການເອົາຊະນະ. ພວກເຈົ້າຄວນຮູ້ວ່າ ເຈດຕະນາຂອງເຮົາແມ່ນເພື່ອທຳລາຍ ແລະ ເອົາຊະນະມະນຸດຊາດທີ່ຊົ່ວຮ້າຍຢ່າງສິ້ນເຊີງ ເພື່ອວ່າ ພວມມັນຈະບໍ່ສາມາດກະບົດຕໍ່ເຮົາອີກຕໍ່ໄປ ແລ້ວແຮງໄກທີ່ຈະໃຫ້ມີຮອດລົມຫາຍໃຈທີ່ຈະມາຂັດຂວາງ ຫຼື ລົບກວນພາລະກິດຂອງເຮົາ. ສະນັ້ນ, ເທົ່າທີ່ມະນຸດຮູ້, ຄຳເວົ້ານີ້ແມ່ນໝາຍເຖິງການເອົາຊະນະ. ບໍ່ວ່າຄວາມໝາຍເພີ່ມຂອງຄຳສັບຈະສື່ເຖິງຫຍັງກໍຕາມ ແຕ່ພາລະກິດຂອງເຮົາແມ່ນເພື່ອເອົາຊະນະມວນມະນຸດ. ໃນຊົ່ວໄລຍະໜຶ່ງ ມັນແມ່ນຄວາມຈິງທີ່ມະນຸດຊາດເປັນສ່ວນປະກອບໃນການຄຸ້ມຄອງຂອງເຮົາ ແຕ່ຖ້າໃຫ້ເວົ້າໃຫ້ຖືກຕ້ອງກວ່ານີ້ ມວນມະນຸດກໍບໍ່ໄດ້ເປັນຫຼາຍກວ່າສັດຕູຂອງເຮົາ. ມວນມະນຸດເປັນສິ່ງຊົ່ວຮ້າຍທີ່ຕໍ່ຕ້ານ ແລະ ບໍ່ເຊື່ອຟັງເຮົາ. ມະນຸດຊາດບໍ່ໄດ້ເປັນຫຼາຍກວ່າລູກຫຼານຂອງສິ່ງຊົ່ວຮ້າຍທີ່ເຮົາໄດ້ສາບແຊ່ງ. ມວນມະນຸດບໍ່ໄດ້ເປັນຫຼາຍກວ່າລູກຫຼານຂອງນາຍເທວະດາທີ່ທໍລະຍົດເຮົາ. ມວນມະນຸດບໍ່ໄດ້ເປັນຫຼາຍກວ່າມໍລະດົກຂອງພວກມານຮ້າຍທີ່ເຮົາໄດ້ປະຕິເສດມາດົນນານແລ້ວ ແລະ ໄດ້ເປັນສັດຕູອັນຮ້າຍກາດຂອງເຮົາທີ່ບໍ່ສາມາດຄືນດີກັນໄດ້ຈົນເຖິງທຸກວັນນີ້. ເນື່ອງຈາກທ້ອງຟ້າທີ່ຢູ່ເທິງມະນຸດຊາດທຸກຄົນບໍ່ສົດໃສ ແລະ ມືດມົວ ໂດຍທີ່ບໍ່ມີຄວາມແຈ່ມແຈ້ງແມ່ນແຕ່ໜ້ອຍ ແລະ ໂລກມະນຸດຖືກໂຍນລົງສູ່ຄວາມມືດສະນິດ ເພື່ອວ່າ ຈະບໍ່ມີຜູ້ໃດທີ່ໃຊ້ຊີວິດຢູ່ໃນໂລກມະນຸດນັ້ນບໍ່ສາມາດເຫັນມືຂອງເຂົາທີ່ຍື່ນອອກໄປຢູ່ຕໍ່ໜ້າຂອງເຂົາ ຫຼື ເຫັນຕາເວັນເມື່ອເຂົາເງີຍຫົວຂອງເຂົາຂຶ້ນ. ເສັ້ນທາງທີ່ຢູ່ກ້ອງຕີນຂອງພວກເຂົາແມ່ນຂີ້ຕົມ ແລະ ເຕັມໄປດ້ວຍບວກຂຸມ ເຊິ່ງກ້ຽວໄປກ້ຽວມາຢ່າງຄົດລ້ຽວ; ທົ່ວແຜ່ນດິນແມ່ນຮົກໄປດ້ວຍຊາກສົບ. ມຸມມືດແມ່ນເຕັມໄປດ້ວຍຊາກສົບຂອງຄົນຕາຍ ແລະ ໃນມຸມທີ່ເຢັນ ແລະ ມີຮົ່ມແມ່ນມີພວກມານຮ້າຍອາໄສຢູ່. ທົ່ວທຸກແຫ່ງຫົນໃນໂລກມະນຸດແມ່ນມີພວກມານຮ້າຍໄປມາຢ່າງຫຼວງຫຼາຍ. ລູກຫຼານຂອງສັດຮ້າຍທຸກປະເພດ ທີ່ປົກຄຸມໄປດ້ວຍສິ່ງທີ່ສົກກະປົກ ແມ່ນຕິດຢູ່ໃນສົງຄາມທີ່ຈັດກອງກຳລັງທະຫານຢ່າງເປັນລະບຽບ ໂດຍມີສຽງດັງກ້ອງສະທ້ານຫວັ່ນໄຫວໃນຫົວໃຈ. ໃນເວລາດັ່ງກ່າວນັ້ນ, ໃນໂລກດັ່ງກ່າວ, “ສະຫວັນເທິງແຜ່ນດິນໂລກ” ດັ່ງກ່າວ, ຜູ້ຄົນຈະສະແຫວງຫາຄວາມສຸກແຫ່ງຊີວິດໄດ້ຢູ່ໃສ? ຄົນໆໜຶ່ງຈະຄົ້ນຫາຈຸດໝາຍປາຍທາງ

ຊີວິດຂອງຕົນໄດ້ຢູ່ໃສ? ມະນຸດຊາດໄດ້ຖືກຢຽບຢໍ່າຢູ່ພາຍໃຕ້ຕີນຂອງຊາຕານມາດົນນານ, ໄດ້ເປັນນັກສະແດງໃນຮູບພາບຂອງຊາຕານຕັ້ງແຕ່ທຳອິດ, ຍິ່ງໄປກວ່ານັ້ນ ມະນຸດຊາດທີ່ເປັນຕົວຢ່າງຂອງຊາຕານ ແລະ ເຮັດໜ້າທີ່ເປັນເຄື່ອງພິສູດຢັ້ງຢືນວ່າມະນຸດເປັນພະຍານໃຫ້ກັບຊາຕານຢ່າງຊັດເຈນ. ເມື່ອເປັນເຊັ່ນນັ້ນ ມະນຸດຊາດ ເຊິ່ງເປັນຄົນທີ່ຕໍ່າຊາມ, ເຊື້ອສາຍຂອງຊາດມະນຸດທີ່ຊົ່ວຊ້າເຫຼົ່ານີ້ຈະສາມາດເປັນພະຍານຝ່າຍພຣະເຈົ້າໄດ້ແນວໃດ? ແລ້ວຄວາມສະຫງ່າລາສີຂອງເຮົາມີຢູ່ໃສ? ໃຜສາມາດເລີ່ມກ່າວຄຳພະຍານຂອງເຮົາ? ເພາະວ່າສັດຕູທີ່ເຮັດໃຫ້ມະນຸດເສື່ອມໂຊມ, ທີ່ຕັ້ງຕົນເປັນປໍລະປັກຕໍ່ເຮົາ ໄດ້ຍຶດເອົາມະນຸດທີ່ເຮົາສ້າງມາແຕ່ດົນນານທີ່ເຕັມໄປດ້ວຍຄວາມສະຫງ່າລາສີຂອງເຮົາ ແລະຄວາມເປັນຢູ່ຂອງເຮົາ ທີ່ເຮົາໃຫ້ການດູແລພວກເຂົາ. ມັນໄດ້ຍາດຊິງເອົາຄວາມສະຫງ່າລາສີຂອງເຮົາໄປ ແລະ ສິ່ງດຽວທີ່ມັນເຮັດຄືປູກຝັງຈິດໃຈມະນຸດດ້ວຍຢາພິດທີ່ເຕັມໄປດ້ວຍຄວາມຊົ່ວຮ້າຍຂອງຊາຕານ ແລະ ດ້ວຍນໍ້າໝາກໄມ້ຈາກຕົ້ນໄມ້ແຫ່ງສະຕິປັນຍາຂອງຄົນດີ ແລະ ຄົນຊົ່ວ. ໃນຕົ້ນເດີມນັ້ນເຮົາສ້າງມະນຸດ ນັ້ນກໍຄື ເຮົາສ້າງອາດາມຜູ້ທີ່ເປັນບັນພະບຸລຸດຂອງມະນຸດ. ອາດາມມີຮູບຮ່າງ ແລະຮູບພາບທີ່ເຕັມໄປດ້ວຍຄວາມກະຕືລືລົ້ນ ແລະ ຊີວິດຊີວາ ແລະ ຍິ່ງໄປກວ່ານັ້ນ ເປັນຄົນທີ່ຢູ່ໃນຄວາມສະຫງ່າລາສີຂອງພຣະເຈົ້າ. ນັ້ນແມ່ນວັນແຫ່ງຄວາມສະຫງ່າລາສີໃນການສ້າງມະນຸດຂອງເຮົາ. ຫລັງຈາກນັ້ນ ເຮົາສ້າງເອວາຈາກຮ່າງກາຍຂອງອາດາມ ແລະ ເຊັ່ນດຽວກັນ ເອວາກໍແມ່ນບັນພະບຸລຸດຂອງມະນຸດ. ດັ່ງນັ້ນຜູ້ຄົນທີ່ເຮົາສ້າງແມ່ນເຕັມໄປດ້ວຍລົມຫາຍໃຈ ແລະ ຄວາມສະຫງ່າລາສີຂອງເຮົາ. ອາດາມແມ່ນເກີດຈາກກຳມືຂອງເຮົາ ແລະ ເປັນຕົວແທນໜ້າຕາຂອງເຮົາ. ດ້ວຍເຫດນັ້ນ ຄວາມໝາຍດັ່ງເດີມຂອງ “ອາດາມ” ກໍຄືເປັນມະນຸດທີ່ເຮົາເປັນຜູ້ສ້າງທີ່ເຕັມໄປດ້ວຍຊີວິດຈິດໃຈ ແລະ ຄວາມສະຫງ່າລາສີຂອງເຮົາ ທີ່ມີຮູບຮ່າງ, ໜ້າຕາ, ຈິດໃຈ ແລະ ລົມຫາຍໃຈ. ອາດາມຄືຜູ້ດຽວທີ່ມີຈິດໃຈ, ສາມາດເປັນຕົວແທນ, ເປັນໃບໜ້າ ແລະ ເປັນຊີວິດຈິດໃຈຂອງເຮົາ. ເມື່ອຕົ້ນເດີມນັ້ນ ເອວາເປັນມະນຸດຜູ້ທີ່ສອງທີ່ເຮົາສ້າງຂຶ້ນ ສະນັ້ນ ຄວາມໝາຍດັ່ງເດີມຂອງ “ເອວາ” ກໍຄືເປັນຜູ້ທີ່ເຮົາສ້າງເພື່ອສືບຕໍ່ກຽດຕິຍົດຂອງເຮົາ ເຊິ່ງນາງເປັນຜູ້ທີ່ເຕັມໄປດ້ວຍຊີວິດຊີວາຂອງເຮົາ ແລະ ນອກນັ້ນນາງຍັງເປັນຜູ້ໄດ້ຮັບຄວາມສະຫງ່າລາສີຈາກເຮົາ. ເອວາມາຈາກອາດາມ ສະນັ້ນ ນາງເປັນອີກຄົນໜຶ່ງທີ່ເປັນໜ້າຕາຂອງເຮົາ ເພາະວ່ານາງເປັນມະນຸດຜູ້ທີ່ສອງທີ່ຖືກສ້າງຂຶ້ນໃນຮູບພາບຂອງເຮົາ. ຄວາມໝາຍດັ່ງເດີມຂອງ “ເອວາ” ກໍຄືເປັນມະນຸດທີ່ມີຊີວິດ, ມີຈິດໃຈ, ເນື້ອໜັງ ແລະ ກະດູກທີ່ເປັນພະຍານ ແລະ ໃບໜ້າຄົນທີ່ສອງຂອງເຮົາໃນທ່າມກາງມະນຸດຊາດ. ພວກເຂົາເປັນບັນພະບຸລຸດຂອງມະນຸດ, ເປັນມະນຸດທີ່ບໍລິສຸດ ແລະ ເປັນສົມບັດທີ່ມີຄຸນຄ່າທີ່ສຸດ. ພວກເຂົາເປັນສິ່ງທີ່ມີຊີວິດທຳອິດທີ່ມີຈິດໃຈ. ແນວໃດກໍຕາມ ມານຮ້າຍໄດ້ຢຽບຢໍ່າ ແລະ ເອົາລູກຫຼານຂອງບັນພະບຸລຸດຂອງມະນຸດເປັນຊະເລີຍ ແລະຢຽບຢໍ່າທຳລາຍ, ນຳເອົາໂລກມະນຸດໄປສູ່ຄວາມມືດ ແລະ ເຮັດໃຫ້ລູກຫຼານຂອງມະນຸດບໍ່ເຊື່ອໃນຕົວເຮົາ. ຍິ່ງເປັນຕາເບື່ອໜ່າຍໄປກວ່ານັ້ນ ໃນຂະນະມານຮ້າຍໄດ້ເຮັດໃຫ້ຜູ້ຄົນເສື່ອມໂຊມ ແລະ ຢຽບຢໍ່າພວກເຂົາທຸກຫົນທຸກແຫ່ງ, ມັນເປັນການທຳລາຍກຽດຕິຍົດ, ຄຳພະຍານ, ຊີວິດຈິດໃຈທີ່ເຮົາມອບໃຫ້ເຂົາ. ທຳລາຍລົມຫາຍໃຈ ແລະ ຊີວິດທີ່ເຮົາມອບໃຫ້ເຂົາ. ທຳລາຍຄວາມສະຫງ່າລາສີຂອງ

ເຮົາໃນໂລກມະນຸດ ແລະ ທຳລາຍເລືອດເນື້ອເຫື່ອແຮງທີ່ເຮົາສະຫຼະໃຫ້ມະນຸດ. ມະນຸດບໍ່ໄດ້ຢູ່ໃນແສງສະຫວ່າງອີກຕໍ່ໄປ, ຜູ້ຄົນໄດ້ສູນເສຍທຸກຢ່າງທີ່ເຮົາມອບໃຫ້ແກ່ພວກເຂົາ ແລະ ພວກເຂົາໄດ້ໂຍນຖິ້ມຄວາມສະຫງ່າລາສີທີ່ເຮົາມອບໃຫ້. ແລ້ວພວກເຂົາຈະຮັບຮູ້ໄດ້ແນວໃດວ່າເຮົາເປັນພຣະຜູ້ເປັນເຈົ້າຂອງທຸກສິ່ງທີ່ສ້າງຂຶ້ນ? ພວກເຂົາຈະສືບຕໍ່ເຊື່ອວ່າເຮົາມີຕົວຕົນໃນສະຫວັນໄດ້ແນວໃດ? ພວກເຂົາຈະຄົ້ນພົບການສະແດງສະຫງ່າລາສີຂອງເຮົາເທິງແຜ່ນດິນໂລກນີ້ໄດ້ແນວໃດ? ພວກຫຼານຊາຍ ຫຼານສາວເຫຼົ່ານີ້ຈະຮັບເອົາພຣະເຈົ້າທີ່ບັນພະບຸລຸດຂອງພວກເຂົາເຄົາລົບບູຊາວ່າເປັນພຣະຜູ້ເປັນເຈົ້າທີ່ສ້າງພວກເຂົາໄດ້ແນວໃດ? ພວກຫຼານຊາຍ ແລະ ຫຼານສາວທີ່ໜ້າອະນາດເຫຼົ່ານີ້ໄດ້ເຕັມໃຈ "ສະເໜີ" ຄວາມສະຫງ່າລາສີ, ໜ້າຕາ ແລະ ຄຳພະຍານທີ່ເຮົາມອບໃຫ້ແກ່ອາດາມ ແລະ ເອວາ ໃຫ້ກັບມານຮ້າຍໄປໝົດ. ພ້ອມທັງຊີວິດທີ່ເຮົາມອບໃຫ້ແກ່ມະນຸດ ເຊິ່ງພວກເຂົາໄດ້ອາໄສມັນເພື່ອຄວາມຢູ່ລອດ; ແລະພວກເຂົາບໍ່ສົນໃຈຕໍ່ການເປັນຢູ່ຂອງສິ່ງຊົ່ວຮ້າຍແທ້ໆ ແລະ ໄດ້ມອບຄວາມສະຫງ່າລາສີຂອງເຮົາທັງໝົດມອບໃຫ້ມັນ. ນີ້ບໍ່ແມ່ນແຫຼ່ງທີ່ມາຂອງຄຳວ່າ "ຕໍ່າຊາມ" ບໍ? ແລ້ວຈະໃຫ້ພວກມະນຸດ, ພວກມານຊົ່ວຮ້າຍ, ພວກຊາກຜີດິບ, ພວກຕົວຢ່າງຂອງຊາຕານ ແລະ ສັດຕູດັ່ງກ່າວຂອງເຮົາຮັບເອົາຄວາມສະຫງ່າລາສີຂອງເຮົາໄດ້ແນວໃດ? ເຮົາຈະຍຶດຄວາມສະຫງ່າລາສີຂອງເຮົາ, ຍຶດຄຳພະຍານຂອງເຮົາທີ່ມີໃນບັນດາມະນຸດ ແລະ ທຸກສິ່ງທີ່ເປັນຂອງເຮົາທີ່ເຮົາມອບໃຫ້ມະນຸດໃນເມື່ອກ່ອນນັ້ນຄືນມາ. ເຮົາຈະເອົາຊະນະມະນຸດທັງໝົດ. ແຕ່ວ່າ ເຈົ້າຄວນຮູ້ວ່າ ມະນຸດທີ່ເຮົາສ້າງນັ້ນແມ່ນເປັນຄົນບໍລິສຸດທີ່ເປັນໜ້າຕາ ແລະ ເປັນກຽດຕິຍົດຂອງເຮົາ. ພວກເຂົາບໍ່ແມ່ນຄົນຂອງຊາຕານ ຫຼື ຢູ່ພາຍໃຕ້ການຢຽບຢໍ່າຂອງມັນ ແຕ່ພວກເຂົາເປັນຕົວຢ່າງຂອງເຮົາທີ່ປາສະຈາກພິດຊົ່ວຮ້າຍຂອງຊາຕານ. ສະນັ້ນ ເຮົາແຈ້ງແກ່ມະນຸດຮູ້ວ່າ ເຮົາຕ້ອງການແຕ່ຜູ້ທີ່ເຮົາສ້າງດ້ວຍກຳມືຂອງເຮົາ ແລະ ຜູ້ທີ່ບໍລິສຸດທີ່ເຮົາຮັກ ແລະ ຜູ້ທີ່ບໍ່ເປັນຄົນຢູ່ພາຍໃຕ້ອຳນາດໃດໆ. ນອກນັ້ນ ເຮົາຈະຊື່ນຊົມໃນຕົວພວກເຂົາ ແລະ ພິຈາລະນາພວກເຂົາໃຫ້ເປັນກຽດຕິຍົດຂອງເຮົາ. ແນວໃດກໍຕາມ ສິ່ງທີ່ເຮົາຕ້ອງການບໍ່ແມ່ນມະນຸດທີ່ຖືກເສື່ອມໂຊມດ້ວຍຊາຕານ, ທີ່ເປັນຄົນຂອງຊາຕານໃນປັດຈຸບັນ ແລະ ເປັນຄົນທີ່ບໍ່ແມ່ນເຮົາສ້າງດັ່ງເດີມ. ເນື່ອງຈາກວ່າເຮົາມີຈຸດປະສົງທີ່ຈະຍຶດເອົາກຽດຕິຍົດຂອງເຮົາໃນໂລກມະນຸດຄືນມາ, ເຮົາຈະເອົາຊະນະຜູ້ຢູ່ລອດພົ້ນໃນບັນດາມະນຸດຊາດ ເພື່ອພິສູດຄວາມຍິ່ງໃຫຍ່ໃນການເອົາຊະນະຊາຕານ. ເຮົາຮັບເອົາແຕ່ຄຳພະຍານທີ່ເປັນແກ້ວປະເສີດສຳລັບເຮົາ ແລະ ເປັນສິ່ງທີ່ເຮົາຊື່ນຊົມ. ນີ້ແມ່ນຈຸດປະສົງຂອງເຮົາ.

ປະຫວັດສາດໄດ້ໃຊ້ຫຼາຍສິບຫຼາຍພັນກວ່າປີເພື່ອທີ່ມະນຸດຊາດຈະມາຮອດຈຸດທີ່ຕົນຢູ່ໃນປັດຈຸບັນ ແຕ່ມະນຸດຊາດທີ່ເຮົາໄດ້ສ້າງຂຶ້ນໃນຕອນຕົ້ນໄດ້ຈົມລົງໄປໃນຄວາມເສື່ອມຊາມແຕ່ດົນນານແລ້ວ. ມະນຸດຊາດບໍ່ແມ່ນມະນຸດຊາດທີ່ເຮົາປາຖະໜາອີກຕໍ່ໄປ ແລະ ດ້ວຍເຫດນັ້ນ ໃນສາຍຕາຂອງເຮົາ ຜູ້ຄົນຈຶ່ງບໍ່ຄູ່ຄວນທີ່ຈະໄດ້ຮັບຊື່ຂອງມະນຸດຊາດອີກຕໍ່ໄປ. ກົງກັນຂ້າມ, ພວກເຂົາແມ່ນມະນຸດຊາດຊັ້ນຕໍ່າທີ່ຊາຕານໄດ້ຈັບເປັນຊະເລີຍ, ແມ່ນຊາກສົບເນົ່າເປື່ອຍທີ່ຍ່າງໄດ້ທີ່ຊາຕານອາໄສຢູ່ ແລະ ເປັນສິ່ງທີ່ຊາຕານເອົາມາໃສ່ໃຫ້ຕົວມັນເອງ. ຜູ້ຄົນບໍ່ເຊື່ອໝັ້ນໃນການມີຢູ່ຂອງເຮົາ ແລະ ພວກເຂົາບໍ່ຕ້ອນຮັບການມາຂອງເຮົາ. ມະນຸດຊາດພຽງແຕ່ຕອບສະໜອງຄຳຮ້ອງຂໍຂອງເຮົາແບບບໍ່ພໍໃຈ ໂດຍທີ່ຍອມ

ເຮັດຕາມສິ່ງເຫຼົ່ານັ້ນຢ່າງຊົ່ວຄາວ ແລະ ບໍ່ແບ່ງປັນຄວາມສຸກ ແລະ ຄວາມເສຍໃຈໃນຊີວິດກັບເຮົາຢ່າງຈິງໃຈ. ເນື່ອງຈາກຜູ້ຄົນເຫັນເຮົາເປັນສິ່ງທີ່ລຶກລັບທີ່ເຂົ້າໃຈຍາກ, ພວກເຂົາຈຶ່ງທຳທ່າຍິ້ມໃສ່ເຮົາແບບບໍ່ພໍໃຈ, ສ້າງນິໄສປະຈົບປະແຈງກັບຜູ້ມີອຳນາດ ຍ້ອນວ່າ ຜູ້ຄົນບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງເຮົາ ແລ້ວແຮງໄກທີ່ຈະຮູ້ເຖິງຄວາມປະສົງຂອງເຮົາໃນປັດຈຸບັນ. ເຮົາຈະຂໍເວົ້າຢ່າງເປີດເຜີຍກັບພວກເຈົ້າດັ່ງນີ້: ເມື່ອວັນນັ້ນມາເຖິງ ຜູ້ທີ່ນະມັດສະການເຮົາຈະແບກຮັບຄວາມທຸກທໍລະມານໄດ້ງ່າຍກວ່າພວກເຈົ້າ. ໃນຄວາມເປັນຈິງແລ້ວ ລະດັບຄວາມເຊື່ອຂອງພວກເຈົ້າໃນຕົວເຮົາບໍ່ໄດ້ເໜືອຄວາມເຊື່ອຂອງໂຢບໄດ້, ແມ່ນແຕ່ຄວາມເຊື່ອຂອງພວກຟາຣີຊາຍທີ່ເປັນຢິວກໍຍັງຫຼາຍກວ່າຂອງພວກເຈົ້າແລ້ວ, ສະນັ້ນ ຖ້າວັນແຫ່ງການເຜົາໄໝ້ລົງມາ ຄວາມທຸກທໍລະມານຂອງພວກເຈົ້າຈະຮ້າຍແຮງກວ່າພວກຟາຣີຊາຍໃນຕອນພວກເຂົາຖືກຕຳນິຕິຕຽນໂດຍພຣະເຢຊູອີກ, ຮ້າຍແຮງກວ່າພວກຜູ້ນຳ 250 ຄົນທີ່ຕໍ່ຕ້ານໂມເຊ ແລະ ຮ້າຍແຮງກວ່າເມືອງໂຊໂດມທີ່ຢູ່ພາຍໃຕ້ແປວໄຟເຜົາໄໝ້ທີ່ມັນກຳລັງທຳລາຍລ້າງ. ເມື່ອໂມເຊຕີກ້ອນຫີນ ແລ້ວນໍ້າທີ່ປະທານໂດຍພຣະເຢໂຮວາກໍໄຫຼພຸ່ງອອກມາ ນັ້ນກໍຍ້ອນມາຈາກຄວາມສັດທາຂອງໂມເຊ. ເມື່ອເດວິດຫຼິ້ນພິນສັນລະເສີນເຮົາ ກໍຄືພຣະເຢໂຮວາ ດ້ວຍຫົວໃຈທີ່ເຕັມໄປດ້ວຍຄວາມສຸກ ກໍຍ້ອນຄວາມສັດທາຂອງເດວິດ. ໂຢບສູນເສຍສັດລ້ຽງທີ່ເຕັມພູເຂົາ ແລະ ຄວາມຮັ່ງມີຢ່າງມະຫາສານ ແລະ ຕົນຕົວກໍເຕັມໄປດ້ວຍຕຸ່ມໜອງ ກໍຍ້ອນຄວາມສັດທາຂອງລາວ. ເມື່ອລາວສາມາດໄດ້ຍິນສຽງຂອງເຮົາ ກໍຄືພຣະເຢໂຮວາ ແລະ ເຫັນຄວາມສະຫງ່າລາສີຂອງເຮົາ ກໍຄືພຣະເຢໂຮວາ ນັ້ນກໍຍ້ອນຄວາມສັດທາຂອງລາວ. ເປໂຕສາມາດຕິດຕາມພຣະເຢຊູຄຣິດ ກໍຍ້ອນຄວາມສັດທາຂອງເປໂຕ. ລາວຖືກຕອກຕະປູຄຶງໃສ່ໄມ້ກາງແຂນເພື່ອເຮົາ ແລະ ເພື່ອມອບປະຈັກພະຍານອັນຍິ່ງໃຫຍ່ໃຫ້ແດ່ເຮົາ ກໍຍ້ອນຄວາມສັດທາຂອງລາວເຊັ່ນກັນ. ໂຢຮັນໄດ້ເຫັນຮູບຮ່າງອັນສະຫງ່າລາສີຂອງພຣະບຸດມະນຸດ ກໍຍ້ອນຄວາມສັດທາຂອງໂຢຮັນ. ລາວໄດ້ເຫັນນິມິດແຫ່ງຍຸກສຸດທ້າຍ ກໍຍ້ອນຄວາມສັດທາຂອງລາວເຊັ່ນກັນ. ສາເຫດກຸ່ມທີ່ຖືກເອີ້ນວ່າ ຕ່າງຊາດທັງຫຼາຍໄດ້ຮັບການເປີດເຜີຍຈາກເຮົາ ແລະ ມາຮູ້ຈັກວ່າເຮົາ ໄດ້ກັບຄືນມາໃນຮ່າງກາຍມະນຸດເພື່ອກະທຳພາລະກິດໃນທ່າມກາງມະນຸດ ກໍຍ້ອນຄວາມສັດທາຂອງພວກເຂົາເຊັ່ນກັນ. ທຸກຄົນທີ່ຖືກຂ້ຽນຕີໂດຍພຣະທຳທີ່ຮຸນແຮງຂອງເຮົາ ແລະ ຍັງຖືກປອບໃຈໂດຍພຣະທຳເຫຼົ່ານັ້ນ ແລະ ຖືກຊ່ວຍໃຫ້ລອດພົ້ນ, ພວກເຂົາບໍ່ໄດ້ຖືກປະຕິບັດແບບນັ້ນຍ້ອນຄວາມເຊື່ອຂອງພວກເຂົາບໍ? ຜູ້ທີ່ເຊື່ອໃນຕົວເຮົາ ແຕ່ຍັງທົນທຸກທໍລະມານຢູ່ກັບຄວາມທຸກຍາກຢູ່ນັ້ນ ພວກເຂົາບໍ່ໄດ້ຖືກປະຕິເສດຈາກໂລກນີ້ເຊັ່ນກັນບໍ? ຜູ້ທີ່ໃຊ້ຊີວິດຢູ່ນອກພຣະທຳຂອງເຮົາ ໂດຍຫຼົບໜີການທໍລະມານແຫ່ງການທົດລອງ, ພວກເຂົາທຸກຄົນບໍ່ແມ່ນກຳລັງລ່ອງລອຍທົ່ວໂລກນີ້ບໍ? ພວກເຂົາປຽບເໝືອນໃບໄມ້ຍາມລະດູໃບໄມ້ຫຼົ່ນທີ່ຖືກລົມພັດໄປທົ່ວທຸກແຫ່ງຫົນ ໂດຍທີ່ບໍ່ມີບ່ອນໃຫ້ພັກ ແລ້ວແຮງໄກທີ່ຈະໄດ້ຮັບພຣະທຳແຫ່ງການປອບໃຈຂອງເຮົາ. ເຖິງແມ່ນວ່າ ການຂ້ຽນຕີ ແລະ ການຫຼໍ່ຫຼອມຂອງເຮົາບໍ່ໄດ້ຕິດຕາມພວກເຂົາ ແຕ່ພວກເຂົາບໍ່ແມ່ນຄົນຂໍທານບໍ ທີ່ລ່ອງລອຍໄປບ່ອນນັ້ນບ່ອນນີ້ ໂດຍຍ່າງໄປມາຕາມຖະໜົນຢູ່ນອກອານາຈັກສະຫວັນ? ໂລກນີ້ເປັນບ່ອນທີ່ເຈົ້າພັກເຊົາແທ້ບໍ? ເຈົ້າສາມາດໄດ້ຮັບຮອຍຍິ້ມທີ່ເລື່ອນລາງທີ່ສຸດແຫ່ງ

ຄວາມພໍໃຈຈາກໂລກນີ້ແທ້ບໍ ໂດຍການຫຼີກຫຼ່ຽງການຂ້ຽນຕີຂອງເຮົາ? ເຈົ້າສາມາດໃຊ້ຄວາມສຸກໄລຍະສັ້ນໆຂອງເຈົ້າເພື່ອປົກປິດຄວາມວ່າງເປົ່າໃນຫົວໃຈຂອງເຈົ້າ ເຊິ່ງເປັນຄວາມວ່າງເປົ່າທີ່ບໍ່ສາມາດປົກປິດໄດ້ແທ້ບໍ? ເຈົ້າອາດຈະສາມາດຫຼອກລວງທຸກຄົນໃນຄອບຄົວຂອງເຈົ້າໄດ້ ແຕ່ເຈົ້າບໍ່ສາມາດຫຼອກລວງເຮົາໄດ້. ເພາະວ່າຄວາມເຊື່ອຂອງເຈົ້າແມ່ນມີໜ້ອຍເກີນໄປ, ຈົນເຖິງປັດຈຸບັນນີ້ ເຈົ້າຈຶ່ງອ່ອນແອທີ່ຈະຄົ້ນຫາຄວາມສຸກທີ່ຊີວິດມີໃຫ້. ເຮົາຂໍກະຕຸ້ນໃຫ້ເຈົ້າ: ໃຊ້ເຄິ່ງຊີວິດຂອງເຈົ້າເພື່ອເຮົາຢ່າງຈິງໃຈຈະດີກວ່າການໃຊ້ຊີວິດທັງຊີວິດໃນສະພາບທຳມະດາ ແລະ ວຸ້ນວາຍຢູ່ກັບເນື້ອໜັງ ໂດຍທົນທຸກກັບຄວາມຍາກລຳບາກທີ່ມະນຸດບໍ່ອາດສາມາດທົນໄດ້. ມັນມີຈຸດປະສົງຫຍັງທີ່ຈະຍົກຄຸນຄ່າຕົນເອງສູງເຖິງຂະໜາດນັ້ນ ແລະ ຫຼົບໜີຈາກການຂ້ຽນຕີຂອງເຮົາ? ມັນມີຈຸດປະສົງຫຍັງທີ່ຈະເຊື່ອງຕົນເອງຈາກການຂ້ຽນຕີຊົ່ວຄາວຂອງເຮົາພຽງແຕ່ໄດ້ຮັບຄວາມອັບອາຍຂາຍໜ້າຊົ່ວນິດນິລັນ ແລະ ການຂ້ຽນຕີຕະຫຼອດໄປເທົ່ານັ້ນ? ໃນຄວາມຈິງແລ້ວ, ເຮົາບໍ່ໄດ້ບັງຄັບໃຫ້ໃຜເຮັດຕາມຄວາມປະສົງຂອງເຮົາ. ຖ້າຜູ້ໃດຜູ້ໜຶ່ງເຕັມໃຈຍອມອ່ອນນ້ອມຕໍ່ແຜນການທັງໝົດຂອງເຮົາຢ່າງແທ້ຈິງ, ເຮົາຈະບໍ່ປະຕິບັດຕໍ່ພວກເຂົາຢ່າງບໍ່ດີ. ແຕ່ເຮົາຕ້ອງການໃຫ້ທຸກຄົນເຊື່ອໃນຕົວເຮົາຄືດັ່ງໂຢບໄດ້ເຊື່ອໃນຕົວເຮົາ ເຊິ່ງນັ້ນກໍຄືພຣະເຢໂຮວາ. ຖ້າຄວາມເຊື່ອຂອງພວກເຈົ້າສູງກວ່າໂທມາ, ແລ້ວຄວາມເຊື່ອຂອງພວກເຈົ້າກໍຈະໄດ້ຮັບການຍ້ອງຍໍຈາກເຮົາ, ພວກເຈົ້າຈະພົບເຫັນຄວາມສຸກໃນຄວາມຈົງຮັກພັກດີຂອງພວກເຈົ້າ ແລະ ພວກເຈົ້າຈະໄດ້ຮັບສະຫງ່າລາສີຂອງເຮົາໃນວັນຂອງພວກເຈົ້າ. ຢ່າງໃດກໍຕາມ, ຜູ້ຄົນທີ່ເຊື່ອໃນໂລກ ແລະ ເຊື່ອໃນມານຮ້າຍ ແມ່ນໄດ້ເຮັດໃຫ້ຈິດໃຈຂອງພວກເຂົາແຂງກະດ້າງ ຄືກັບຜູ້ຄົນຂອງເມືອງໂຊໂດມ ໂດຍທີ່ມີເມັດຊາຍທີ່ລົມພັດມາເຕັມໃນດວງຕາຂອງພວກເຂົາ ແລະ ມີຂອງຖວາຍຈາກມານຮ້າຍໃນປາກຂອງພວກເຂົາ ແລະ ໃນຈິດໃຈຂອງພວກເຂົາແມ່ນຖືກຄອບງຳໂດຍສິ່ງຊົ່ວຮ້າຍທີ່ໄດ້ຍຶດເອົາໂລກແຕ່ດົນນານແລ້ວ. ຄວາມຄິດຂອງພວກເຂົາໄດ້ຖືກຈັບໃຫ້ເປັນຊະເລີຍໂດຍມານຮ້າຍໃນສະໄໝບູຮານ. ສະນັ້ນ, ຄວາມເຊື່ອຂອງມະນຸດໄດ້ຖືກພັດໄປກັບລົມ ແລະ ພວກເຂົາບໍ່ສາມາດແມ່ນແຕ່ຈະສັງເກດເຫັນພາລະກິດຂອງເຮົາ. ສິ່ງທີ່ພວກເຂົາສາມາດເຮັດໄດ້ກໍພຽງແຕ່ພະຍາຍາມດ້ວຍຄວາມອ່ອນແອໃນການປະຕິບັດຕໍ່ພາລະກິດຂອງເຮົາແບບພໍເປັນພິທີ ຫຼື ວິເຄາະມັນຢ່າງຫຍາບໆ ເພາະວ່າ ພວກເຂົາໄດ້ຖືກພິດຂອງຊາຕານຄອບງຳແຕ່ດົນນານແລ້ວ.

ເຮົາຈະເອົາຊະນະມະນຸດຊາດ ເພາະວ່າ ຜູ້ຄົນຖືກເຮົາສ້າງ ແລະ ຍິ່ງໄປກວ່ານັ້ນ ຜູ້ຄົນໄດ້ມີຄວາມສຸກກັບທຸກສິ່ງທີ່ເຮົາສ້າງຂຶ້ນ. ແຕ່ຜູ້ຄົນໄດ້ປະຕິເສດເຮົາເຊັ່ນກັນ; ເຮົາບໍ່ໄດ້ຢູ່ໃນໃຈຂອງພວກເຂົາ ແລະ ພວກເຂົາເຫັນເຮົາຄືເປັນພາລະໃນການດຳລົງຢູ່ຂອງພວກເຂົາ ຈົນເຖິງກັບວ່າ ເມື່ອໄດ້ເຫັນເຮົາຢ່າງແທ້ຈິງ ພວກເຂົາກໍຍັງປະຕິເສດເຮົາ ແລະ ຄົ້ນຄິດຊອກຫາທຸກວິທີທາງເພື່ອເອົາຊະນະເຮົາ. ຜູ້ຄົນບໍ່ຍອມໃຫ້ເຮົາປະຕິບັດຕໍ່ພວກເຂົາຢ່າງຈິງຈັງ ຫຼື ຮຽກຮ້ອງຈາກພວກເຂົາຢ່າງເຄັ່ງຄັດ ຫຼື ພວກເຂົາບໍ່ອະນຸຍາດໃຫ້ເຮົາພິພາກສາ ຫຼື ຂ້ຽນຕີຄວາມບໍ່ຊອບທຳຂອງພວກເຂົາ. ແທນທີ່ຈະພົບວ່າສິ່ງນີ້ໜ້າສົນໃຈ ພວກເຂົາພັດເຫັນມັນໜ້າເບື່ອ. ສະນັ້ນ ພາລະກິດຂອງເຮົາແມ່ນເພື່ອຮັບເອົາມະນຸດຊາດຜູ້ທີ່ກິນ, ດື່ມ ແລະ ສັນລະເສີນໃນຕົວເຮົາ ແຕ່ບໍ່ຮູ້ຈັກເຮົາ ແລະ ເຮົາຈະເອົາຊະນະພວກເຂົາ. ເຮົາຈະ

ປົດອາວຸດມະນຸດຊາດ ແລະ ຫຼັງຈາກນັ້ນ ຈະນຳເອົາທູດສະຫວັນ, ເອົາສະຫງ່າລາສີຂອງເຮົາ ແລ້ວເຮົາຈະກັບຄືນສູ່ສະຖານທີ່ພັກເຊົາຂອງເຮົາ. ເພາະວ່າສິ່ງທີ່ຜູ້ຄົນໄດ້ກະທຳໄປນັ້ນ ແມ່ນເຮັດໃຫ້ເຮົາເຈັບປວດໃຈ ແລະ ທຳລາຍພາລະກິດຂອງເຮົາແຕກເປັນຊິ້ນສ່ວນມາດົນນານແລ້ວ. ເຮົາຕັ້ງໃຈຍຶດເອົາສະຫງ່າລາສີທີ່ມານຮ້າຍໄດ້ເອົາໄປ ກ່ອນທີ່ຈະຍ່າງຈາກໄປຢ່າງມີຄວາມສຸກ ໂດຍປ່ອຍໃຫ້ມະນຸດສືບຕໍ່ດຳລົງຊີວິດຂອງພວກເຂົາ, ສືບຕໍ່ "ໃຊ້ຊີວິດ ແລະ ເຮັດວຽກງານຢ່າງສະຫງົບ ແລະ ມີຄວາມສຸກ", ສືບຕໍ່ "ປູກຝັງຕາມໄຮ່ນາຂອງພວກເຂົາເອງ" ແລະ ເຮົາຈະບໍ່ໄປແຊກແຊງຊີວິດຂອງພວກເຂົາອີກຕໍ່ໄປ. ແຕ່ຕອນນີ້ ເຮົາເຈດຕະນາທີ່ຈະຍຶດເອົາສະຫງ່າລາສີຂອງເຮົາຄືນຈາກມືຂອງມານຮ້າຍ, ເອົາສະຫງ່າລາສີທັງໝົດທີ່ເຮົາເອົາມາສູ່ມະນຸດໃນຕອນສ້າງໂລກນັ້ນຄືນ. ເຮົາຈະບໍ່ມອບສິ່ງນີ້ໃຫ້ມະນຸດຊາດເທິງແຜ່ນດິນໂລກນີ້ອີກຕໍ່ໄປ. ຍ້ອນວ່າ ມະນຸດບໍ່ພຽງແຕ່ບໍ່ສາມາດຮັກສາສະຫງ່າລາສີຂອງເຮົາເທົ່ານັ້ນ ແຕ່ພວກເຂົາຍັງໄດ້ເອົາມັນໄປແລກປ່ຽນກັບຮູບລັກຂອງຊາຕານ. ຜູ້ຄົນບໍ່ໃຫ້ຄຸນຄ່າໃນການມາຂອງເຮົາ ຫຼື ພວກເຂົາບໍ່ໃຫ້ຄຸນຄ່າວັນແຫ່ງລັດສະໝີຂອງເຮົາ. ພວກເຂົາບໍ່ຍິນດີທີ່ຈະໄດ້ຮັບການຂ້ຽນຕີຈາກເຮົາ ແລ້ວແຮງໄກທີ່ພວກເຂົາຈະເຕັມໃຈທີ່ຈະມອບສະຫງ່າລາສີຂອງເຮົາຄືນໃຫ້ແກ່ເຮົາ ຫຼື ພວກເຂົາບໍ່ເຕັມໃຈທີ່ຈະປະຖິ້ມພິດຂອງຜູ້ທີ່ຊົ່ວຮ້າຍ. ມະນຸດຊາດຍັງສືບຕໍ່ຫຼອກລວງເຮົາຄືເກົ່າ, ຜູ້ຄົນຍັງມີຮອຍຍິ້ມສົດໃສ ແລະ ໃບໜ້າທີ່ມີຄວາມສຸກຄືເກົ່າ. ພວກເຂົາບໍ່ຮູ້ເລິກເຖິງຄວາມມືດມົວທີ່ຈະມາສູ່ມະນຸດຫຼັງຈາກສະຫງ່າລາສີຂອງເຮົາຈາກພວກເຂົາໄປ. ໂດຍສະເພາະແລ້ວ ພວກເຂົາບໍ່ຮູ້ວ່າ ເມື່ອວັນຂອງເຮົາມາຮອດມະນຸດຊາດທຸກຄົນ ມັນຍິ່ງຈະມີຄວາມຍາກສຳລັບພວກເຂົາຫຼາຍກວ່າຜູ້ຄົນໃນສະໄໝຂອງໂນອາອີກ ຍ້ອນວ່າ ພວກເຂົາບໍ່ຮູ້ວ່າ ອິດສະຣາເອນມືດມົວພຽງໃດເມື່ອສະຫງ່າລາສີຂອງເຮົາໄດ້ຈາກໄປ ເນື່ອງຈາກມະນຸດລືມໄປວ່າ ໃນຍາມຮຸ່ງເຊົ້າມັນຍາກສໍ່າໃດທີ່ຈະຜ່ານຜ່າກາງຄືນທີ່ມືດສະນິດນັ້ນໄດ້. ເມື່ອຕາເວັນລັບຟ້າອີກຄັ້ງ ແລະ ຄວາມມືດລົງມາສູ່ມະນຸດ, ເຂົາຈະຮ້ອງໄຫ້ ແລະ ກັດແຂ້ວຂອງເຂົາໃນຄວາມມືດອີກຄັ້ງ. ພວກເຈົ້າໄດ້ລືມແລ້ວບໍວ່າ ເມື່ອສະຫງ່າລາສີຂອງເຮົາໄດ້ຈາກອິດສະຣາເອນ ມັນຍາກພຽງໃດສຳລັບຊາວອິດສະຣາເອນທີ່ຈະຜ່ານຜ່າວັນແຫ່ງຄວາມທຸກທໍລະມານເຫຼົ່ານັ້ນ? ບັດນີ້ ເຖິງເວລາແລ້ວທີ່ພວກເຂົາຈະເຫັນສະຫງ່າລາສີຂອງເຮົາ ແລະ ພ້ອມນີ້ ມັນເຖິງເວລາແລ້ວ ທີ່ພວກເຈົ້າຈະແບ່ງປັນວັນແຫ່ງສະຫງ່າລາສີຂອງເຮົາ. ມະນຸດຈະໂສກເສົ້າເສຍໃຈໃນທ່າມກາງຂອງຄວາມມືດ ເມື່ອສະຫງ່າລາສີຂອງເຮົາໜີຈາກແຜ່ນດິນອັນເປິເປື້ອນນີ້. ບັດນີ້ແມ່ນວັນແຫ່ງສະຫງ່າລາສີ ທີ່ເຮົາປະຕິບັດພາລະກິດຂອງເຮົາ ແລະ ມັນແມ່ນວັນທີ່ເຮົາຍົກເວັ້ນມະນຸດຊາດຈາກຄວາມທຸກທໍລະມານ ເນື່ອງຈາກເຮົາຈະບໍ່ໄດ້ແບ່ງປັນເວລາແຫ່ງຄວາມທໍລະມານ ແລະ ຄວາມຍາກລຳບາກກັບພວກເຂົາ. ເຮົາຕ້ອງການເອົາຊະນະມະນຸດຢ່າງສົມບູນເທົ່ານັ້ນ ແລະ ເອົາຊະນະຜູ້ພວກທີ່ຊົ່ວຮ້າຍຈາກມວນມະນຸດ.

# ເຈົ້າຮູ້ຫຍັງແດ່ກ່ຽວກັບຄວາມສັດທາ?

ໃນມະນຸດມີພຽງຄຳສັບທີ່ບໍ່ແນ່ນອນກ່ຽວກັບຄວາມສັດທາ, ນອກນັ້ນມະນຸດຍັງບໍ່ຮູ້ວ່າຄວາມສັດທາປະກອບມີຫຍັງແດ່, ແລ້ວແຮງໄກຍ້ອນຫຍັງເຂົາຈຶ່ງມີຄວາມສັດທາ. ມະນຸດເຂົ້າໃຈໜ້ອຍເກີນໄປ ແລະ ມະນຸດເອງແມ່ນຂາດແຄນເກີນໄປ; ຄວາມສັດທາຂອງເຂົາຕໍ່ກັບເຮົາ ແມ່ນບໍ່ມີສະຕິ ແລະ ບໍ່ສົນໃຈ. ເຖິງແມ່ນວ່າເຂົາບໍ່ຮູ້ວ່າສັດທາແມ່ນຫຍັງ ຫຼື ຍ້ອນຫຍັງເຂົາຈຶ່ງມີຄວາມສັດທາໃນເຮົາ, ເຂົາຍັງສືບຕໍ່ເຊື່ອໃນເຮົາຢ່າງຫຼົງໄຫຼ. ສິ່ງທີ່ເຮົາຮຽກຮ້ອງກັບມະນຸດບໍ່ແມ່ນພຽງແຕ່ໃຫ້ເຂົາຮ້ອງຫາເຮົາຢ່າງຫຼົງໄຫຼແບບວິທີນີ້ ຫຼື ເຊື່ອໃນເຮົາແບບພໍເປັນພິທີ, ຍ້ອນວ່າພາລະກິດທີ່ເຮົາເຮັດແມ່ນເພື່ອວ່າ ມະນຸດອາດໄດ້ເຫັນເຮົາ ແລະ ຮູ້ຈັກເຮົາ, ບໍ່ແມ່ນເພື່ອໃຫ້ມະນຸດໄດ້ປະທັບໃຈ ແລະ ເບິ່ງເຮົາໃນແສງສະຫວ່າງໃໝ່. ຄັ້ງໜຶ່ງ ເຮົາເຄີຍສຳແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນຫຼາຍຢ່າງ ແລະ ສະແດງຫຼາຍສິ່ງທີ່ອັດສະຈັນ ແລະ ບັນດາຊາວອິດສະຣາເອນໃນເວລານັ້ນໄດ້ສະແດງຄວາມເຄົາລົບຕໍ່ເຮົາຢ່າງໃຫຍ່ຫຼວງ ແລະ ເຊີດຊູຕໍ່ຄວາມສາມາດພິເສດຂອງເຮົາຢ່າງສູງ ໃນການຮັກສາຄົນເຈັບປ່ວຍ ແລະ ຂັບໄລ່ຜີສາດຮ້າຍ. ໃນເວລານັ້ນ, ຊາວຢິວຄິດວ່າພະລັງອຳນາດໃນການປິ່ນປົວຂອງເຮົາແມ່ນມີຄວາມຊຳນານ, ພິເສດທີ່ສຸດ ແລະ ຍ້ອນການກະທຳຫຼາຍຢ່າງຂອງເຮົາ, ພວກເຂົາທຸກຄົນຈຶ່ງເຄົາລົບບູຊາເຮົາ ແລະ ຮູ້ສຶກເຄົາລົບເຮົາຢ່າງສູງຕໍ່ອຳນາດທັງໝົດຂອງເຮົາ. ດັ່ງນັ້ນ, ຜູ້ຄົນທັງໝົດທີ່ໄດ້ເຫັນເຮົາສະແດງສິ່ງມະຫັດສະຈັນ ໄດ້ຕິດຕາມເຮົາຢ່າງໃກ້ສິດ, ເຊັ່ນວ່າບັນດາຫຼາຍພັນຄົນທີ່ໄດ້ຢູ່ອ້ອມຂ້າງເຮົາ ເພື່ອເບິ່ງເຮົາຮັກສາຄົນເຈັບປ່ວຍ. ເຮົາໄດ້ສະແດງໝາຍສຳຄັນ ແລະ ສິ່ງມະຫັດສະຈັນຢ່າງຫຼວງຫຼາຍ, ແຕ່ວ່າຜູ້ຄົນພຽງແຕ່ເບິ່ງເຮົາເປັນຜູ້ຊ່ຽວຊານທາງການແພດ; ເຊັ່ນດຽວກັນ, ເຮົາໄດ້ເວົ້າພຣະທຳຢ່າງຫຼວງຫຼາຍເພື່ອສອນຜູ້ຄົນໃນເວລານັ້ນ, ແຕ່ວ່າພວກເຂົາພຽງແຕ່ເຫັນເຮົາເປັນຄູສອນທີ່ມີຄວາມສາມາດເໜືອກວ່າອັກຄະສາວົກຂອງເຂົາເທົ່ານັ້ນ. ແມ່ນແຕ່ທຸກວັນນີ້, ຫຼັງຈາກທີ່ມະນຸດໄດ້ພົບເຫັນການບັນທຶກທາງປະຫວັດສາດກ່ຽວກັບພາລະກິດຂອງເຮົາ, ການແປຄວາມໝາຍຂອງພວກເຂົາຍັງສືບຕໍ່ເນື່ອງວ່າເຮົາແມ່ນແພດຜູ້ຍິ່ງໃຫຍ່ ຜູ້ທີ່ຮັກສາຄົນເຈັບປ່ວຍ ແລະ ຄູສອນຕໍ່ຜູ້ທີ່ບໍ່ມີຄວາມຮູ້ ແລະ ພວກເຂົາໄດ້ໃຫ້ນິຍາມເຮົາຄືກັບພຣະເຢຊູຄຣິດເຈົ້າ ຜູ້ທີ່ມີຄວາມເມດຕາ. ຜູ້ຄົນເຫຼົ່ານັ້ນທີ່ແປພຣະຄຳພີ ອາດມີຄວາມເໜືອກວ່າທັກສະຂອງເຮົາໃນການປິ່ນປົວ ຫຼື ອາດແມ່ນແຕ່ເປັນອັກຄະສາວົກຜູ້ທີ່ມີຄວາມເໜືອກວ່າອາຈານຂອງພວກເຂົາ, ແຕ່ມະນຸດເຫຼົ່ານັ້ນ ຜູ້ທີ່ມີຊື່ສຽງໂດ່ງດັງ, ຜູ້ທີ່ມີຊື່ເປັນທີ່ຮູ້ຈັກກັນທົ່ວໂລກ ຖືວ່າເຮົານັ້ນຕໍ່າຕ້ອຍຫຼາຍໂດຍເປັນພຽງແຕ່ແພດໜໍເທົ່ານັ້ນ. ການກະທຳຂອງເຮົາແມ່ນຫຼາຍກວ່າຈຳນວນເມັດຊາຍທີ່ມີຢູ່ຕາມຫາດຊາຍ ແລະ ສະຕິປັນຍາຂອງເຮົາແມ່ນເໜືອກວ່າບັນດາລູກຊາຍທັງໝົດຂອງໂຊໂລໂມນ, ແຕ່ຜູ້ຄົນພຽງແຕ່ຄິດກ່ຽວກັບເຮົາຄືກັບແພດທີ່ບໍ່ມີຄວາມສຳຄັນຫຍັງເລີຍ ແລະ ອາຈານທີ່ບໍ່ເປັນທີ່ຮັບຮູ້ຂອງມະນຸດ. ຫຼາຍຄົນເຊື່ອໃນເຮົາພຽງແຕ່ເພື່ອໃຫ້ເຮົາຮັກສາພວກເຂົາ. ຫຼາຍຄົນເຊື່ອໃນເຮົາພຽງແຕ່ເພື່ອໃຫ້ເຮົາໃຊ້ພະລັງຂອງເຮົາຂັບໄລ່ວິນຍານທີ່ບໍ່ສະອາດອອກຈາກຮ່າງກາຍຂອງພວກເຂົາ. ຫຼາຍຄົນເຊື່ອໃນເຮົາພຽງເພື່ອໄດ້ຮັບຄວາມສະຫງົບ ແລະ ຄວາມສຸກຈາກເຮົາ.

ຫຼາຍຄົນທີ່ເຊື່ອໃນເຮົາພຽງແຕ່ເພື່ອຕ້ອງການຄວາມຮັ່ງມີທາງວັດຖຸຈາກເຮົາຍິ່ງຂຶ້ນ. ຫຼາຍຄົນເຊື່ອໃນເຮົາພຽງແຕ່ເພື່ອໃຊ້ຊີວິດນີ້ຢ່າງສະຫງົບສຸກ ແລະ ເພື່ອຈະໄດ້ປອດໄພ ແລະ ຢູ່ລອດ ໃນໂລກທີ່ຈະມາເຖິງ. ຫຼາຍຄົນເຊື່ອໃນເຮົາເພື່ອຫຼີກເວັ້ນຄວາມທຸກທໍລະມານແຫ່ງນະຮົກ ແລະ ເພື່ອໄດ້ຮັບພອນແຫ່ງສະຫວັນ. ຫຼາຍຄົນເຊື່ອໃນເຮົາພຽງແຕ່ເພື່ອຄວາມສະດວກສະບາຍຊົ່ວຄາວ ແຕ່ບໍ່ສະແຫວງຫາທີ່ຈະໄດ້ຮັບສິ່ງໃດໆໃນໂລກທີ່ຈະມາເຖິງ. ໃນເວລາທີ່ເຮົານໍາຄວາມໂກດຮ້າຍຂອງເຮົາລົງມາສູ່ມະນຸດ ແລະ ຈັບກຸມເອົາຄວາມສຸກ ແລະ ຄວາມສະຫງົບສຸກທັງໝົດທີ່ຄັ້ງໜຶ່ງເຂົາເຄີຍມີ, ມະນຸດກໍຈະເກີດມີຄວາມສົງໄສ. ເມື່ອເຮົາມອບຄວາມທຸກທໍລະມານແຫ່ງນະຮົກໃຫ້ກັບມະນຸດ ແລະ ໄດ້ຮຽກກັບຄືນພອນແຫ່ງສະຫວັນ, ຄວາມອັບອາຍຂອງມະນຸດກໍຈະກາຍເປັນຄວາມໂກດແຄ້ນ. ເມື່ອມະນຸດ ຮ້ອງຂໍໃຫ້ເຮົາປິ່ນປົວເຂົາ, ເຮົາແມ່ນບໍ່ໄດ້ເອົາໃຈໃສ່ເຂົາ ແລະ ຮູ້ສຶກກຽດຊັງຕໍ່ເຂົາ; ມະນຸດກໍໜີອອກຈາກເຮົາໄປສະແຫວງຫາວິທີການແຫ່ງການແພດສາດ ແລະ ເວດມົນທີ່ຊົ່ວຮ້າຍ. ໃນເວລາທີ່ເຮົາເອົາທຸກສິ່ງທຸກຢ່າງທີ່ມະນຸດຕ້ອງການຈາກເຮົາໄປ, ທຸກຄົນກໍຫາຍໄປໂດຍບໍ່ມີຮ່ອງຮອຍ. ສະນັ້ນ, ເຮົາຈຶ່ງເວົ້າວ່າມະນຸດມີຄວາມສັດທາໃນເຮົາ ເພາະວ່າເຮົາໃຫ້ຄວາມກະລຸນາຫຼາຍເກີນໄປ ແລະ ມີສິ່ງທີ່ຈະໄດ້ຮັບຫລາຍເກີນໄປ. ຊາວຢິວເຊື່ອໃນເຮົາ ເນື່ອງຈາກຄວາມກະລຸນາຂອງເຮົາ ແລະ ຕິດຕາມເຮົາທຸກບ່ອນທີ່ເຮົາໄປ. ບັນດາມະນຸດທີ່ໂງ່ຈ້າເຫຼົ່ານີ້ທີ່ມີຄວາມຮູ້ ແລະ ປະສົບການທີ່ຈໍາກັດໄດ້ສະແຫວງຫາພຽງແຕ່ເພື່ອໄດ້ເຫັນໝາຍສໍາຄັນ ແລະ ສິ່ງມະຫັດສະຈັນທີ່ເຮົາສະແດງອອກມາ. ພວກເຂົາຖືວ່າເຮົາເປັນຫົວໜ້າຄົວເຮືອນຂອງຊາວຢິວ ເຊິ່ງເປັນຜູ້ທີ່ສາມາດສະແດງສິ່ງມະຫັດສະຈັນທີ່ຍິ່ງໃຫຍ່ທີ່ສຸດ. ສະນັ້ນເມື່ອເຮົາໄດ້ຂັບໄລ່ຜີສາດຮ້າຍຈາກມະນຸດ, ມັນກໍເຮັດໃຫ້ເກີດມີການສົນທະນາຫຼາຍຢ່າງໃນບັນດາພວກເຂົາ: ພວກເຂົາເວົ້າວ່າເຮົາແມ່ນເອລີຢາ, ວ່າເຮົາແມ່ນໂມເຊ, ວ່າເຮົາແມ່ນຜູ້ທີ່ເກົ່າແກ່ທີ່ສຸດຈາກຜູ້ທໍານາຍທັງໝົດ, ວ່າເຮົາມີຄວາມຍິ່ງໃຫຍ່ທີ່ສຸດໃນບັນດາແພດທັງໝົດ. ນອກຈາກຕົວເຮົາເອງແລ້ວທີ່ເວົ້າວ່າເຮົາແມ່ນຊີວິດ, ວິທີທາງ ແລະ ຄວາມຈິງ, ບໍ່ມີໃຜສາມາດຮູ້ການດໍາລົງຢູ່ຂອງເຮົາ ຫຼື ຕົວຕົນຂອງເຮົາ. ນອກຈາກຕົວເຮົາເອງແລ້ວທີ່ກ່າວວ່າ ສະຫວັນເປັນສະຖານທີ່ທີ່ພຣະບິດາຂອງເຮົາອາໄສຢູ່, ບໍ່ມີໃຜຮູ້ວ່າເຮົາແມ່ນພຣະບຸດຂອງພຣະເຈົ້າ ແລະ ພ້ອມນັ້ນກໍຍັງເປັນພຣະເຈົ້າອີກດ້ວຍ. ນອກຈາກຕົວເຮົາເອງແລ້ວທີ່ກ່າວວ່າ ເຮົາຈະນໍາການໄຖ່ບາບມາສູ່ມະນຸດໂລກທັງໝົດ ແລະ ໄຖ່ບາບມະນຸດໂລກ, ບໍ່ມີໃຜຮູ້ວ່າເຮົາເປັນຜູ້ໄຖ່ບາບຂອງມະນຸດໂລກ ແລະ ມະນຸດພຽງແຕ່ຮູ້ຈັກເຮົາໃນນາມມະນຸດຜູ້ມີນໍ້າໃຈ ແລະ ມີຄວາມເມດຕາກະລຸນາ. ນອກຈາກຕົວເຮົາເອງທີ່ສາມາດອະທິບາຍໄດ້ທັງໝົດກ່ຽວກັບການເປັນຢູ່ຂອງເຮົາ, ບໍ່ມີໃຜຮູ້ຈັກເຮົາ ແລະ ບໍ່ມີໃຜເຊື່ອວ່າເຮົາແມ່ນພຣະບຸດຂອງພຣະເຈົ້າຜູ້ຊົງດໍາລົງຢູ່. ນັ້ນແມ່ນສັດທາຂອງຜູ້ຄົນທີ່ມີຕໍ່ຕົວເຮົາ ແລະ ວິທີທີ່ພວກເຂົາພະຍາຍາມຫຼອກລວງເຮົາ. ພວກເຂົາຈະສາມາດເປັນພະຍານໃຫ້ກັບເຮົາໄດ້ແນວໃດ ໃນເມື່ອພວກເຂົາມີທັດສະນະດັ່ງກ່າວກ່ຽວກັບເຮົາ?

ຜູ້ຄົນເຊື່ອໃນເຮົາ, ແຕ່ພວກເຂົາບໍ່ມີຄວາມສາມາດໃນການເປັນປະຈັກພະຍານຕໍ່ເຮົາ ຫຼື ພວກເຂົາບໍ່ສາມາດສະແດງຕົນເປັນພະຍານໃຫ້ເຮົາ ກ່ອນທີ່ເຮົາຈະເຜີຍຕົວເຮົາເອງໃຫ້ເປັນທີ່ຮູ້ຈັກ. ຜູ້ຄົນເຫັນເຮົາ ພຽງແຕ່ວ່າເຮົາມີຄວາມເໜືອກວ່າສິ່ງມີຊີວິດທັງຫຼາຍ ແລະ ມະນຸດຜູ້ທີ່ມີຄວາມບໍລິສຸດທັງໝົດ

ແລະ ເຫັນວ່າພາລະກິດທີ່ເຮົາກະທຳບໍ່ສາມາດເຮັດໄດ້ໂດຍມະນຸດ. ດັ່ງນັ້ນ, ຈາກຊາວຢິວມາຮອດຜູ້ຄົນໃນຍຸກປັດຈຸບັນ ເຊິ່ງທັງໝົດໄດ້ເຫັນການກະທຳອັນຮຸ່ງເຮືອງຂອງເຮົາທີ່ບໍ່ໄດ້ຮັບການເຕີມເຕັມຫຍັງເລີຍນອກຈາກຄວາມຢາກຮູ້ຢາກເຫັນເຮົາເທົ່ານັ້ນ ແລະ ບໍ່ມີຄຳເວົ້າຈາກປາກສິ່ງທີ່ມີຊີວິດແມ່ນແຕ່ຜູ້ດຽວທີ່ສາມາດເປັນພະຍານໃຫ້ເຮົາ. ມີພຽງພຣະບິດາຂອງເຮົາເທົ່ານັ້ນ ທີ່ຮັບເປັນພະຍານໃຫ້ກັບເຮົາ ແລະ ສ້າງເສັ້ນທາງໃຫ້ເຮົາໃນບັນດາສິ່ງມີຊີວິດທັງຫຼາຍ; ຖ້າຫາກພຣະອົງບໍ່ໄດ້ກະທຳສິ່ງນັ້ນ, ບໍ່ວ່າເຮົາຈະເຮັດແນວໃດ, ມະນຸດກໍຈະບໍ່ມີມື້ຮູ້ໄດ້ວ່າເຮົາເປັນພຣະເຈົ້າແຫ່ງການຊົງສ້າງ, ສຳລັບມະນຸດແມ່ນຮູ້ພຽງແຕ່ເອົາຈາກເຮົາ ແລະ ບໍ່ມີຄວາມສັດທາໃນເຮົາຈາກຜົນຂອງພາລະກິດຂອງເຮົາ. ມະນຸດຮູ້ເຮົາພຽງແຕ່ຍ້ອນວ່າ ເຮົານັ້ນມີຄວາມບໍລິສຸດໃຈ ແລະ ບໍ່ມີສ່ວນໃດທີ່ເປັນບາບ, ຍ້ອນເຮົາສາມາດອະທິບາຍຄວາມເລິກລັບໄດ້ຈຳນວນຫຼາຍ, ຍ້ອນເຮົາຢູ່ເໜືອຝູງຊົນ ຫຼື ຍ້ອນມະນຸດໄດ້ຮັບຜົນປະໂຫຍດຫຼາຍຈາກເຮົາ, ແຕ່ວ່າມີພຽງໜ້ອຍຄົນທີ່ເຊື່ອວ່າເຮົາຄືພຣະເຈົ້າແຫ່ງການຊົງສ້າງ. ນີ້ແມ່ນເຫດຜົນທີ່ເຮົາເວົ້າວ່າ ມະນຸດບໍ່ຮູ້ວ່າເປັນຫຍັງພວກເຂົາຈຶ່ງສັດທາໃນຕົວເຮົາ; ເຂົາບໍ່ຮູ້ຈຸດປະສົງ ຫຼື ຄວາມໝາຍຂອງການມີສັດທາໃນເຮົາ. ມະນຸດຂາດຄວາມເປັນຈິງ, ດ້ວຍເຫດນັ້ນ ເຂົາຈຶ່ງເກືອບບໍ່ເໝາະສົມທີ່ຈະເປັນພະຍານແກ່ເຮົາ. ພວກເຈົ້າມີຄວາມສັດທາທີ່ແທ້ຈິງໜ້ອຍເກີນໄປ ແລະ ໄດ້ຮັບໜ້ອຍເກີນໄປ, ດ້ວຍເຫດນັ້ນ, ພວກເຈົ້າຈຶ່ງມີຄວາມເປັນປະຈັກພະຍານໜ້ອຍເກີນໄປ. ຍິ່ງໄປກວ່ານັ້ນ, ພວກເຈົ້າມີຄວາມເຂົ້າໃຈໜ້ອຍເກີນໄປ ແລະ ຂາດແຄນຫຼາຍເກີນໄປ, ດ້ວຍເຫດນັ້ນ ພວກເຈົ້າຈຶ່ງເກືອບບໍ່ເໝາະສົມທີ່ຈະເປັນພະຍານຕໍ່ກັບການກະທຳຂອງເຮົາ. ຄວາມຕັ້ງໃຈຂອງພວກເຈົ້າ ນັ້ນຖືວ່າສຳຄັນຫຼາຍ, ແຕ່ພວກເຈົ້າແນ່ໃຈບໍ່ວ່າ ພວກເຈົ້າຈະສາມາດເປັນພະຍານເຖິງແກ່ນແທ້ຂອງພຣະເຈົ້າໄດ້? ສິ່ງທີ່ພວກເຈົ້າໄດ້ປະສົບ ແລະ ເຫັນແມ່ນເໜືອກວ່າຂອງໄພ່ພົນ ແລະ ຜູ້ທຳນາຍຈາກທຸກຍຸກທຸກສະໄໝ, ແຕ່ວ່າພວກເຈົ້າສາມາດໃຫ້ຄຳປະຈັກພະຍານທີ່ຍິ່ງໃຫຍ່ກວ່າຄຳເວົ້າຂອງບັນດາໄພ່ພົນ ແລະ ຜູ້ທຳນາຍເຫຼົ່ານີ້ຈາກສະໄໝກ່ອນໄດ້ບໍ? ບັດນີ້ ສິ່ງທີ່ເຮົາປະທານໃຫ້ພວກເຈົ້າ ແມ່ນເໜືອກວ່າໂມເຊ ແລະ ເໜືອກວ່າເດວິດ, ສະນັ້ນ ໃນທຳນອງດຽວກັນ ເຮົາຂໍການເປັນປະຈັກພະຍານຂອງພວກເຈົ້າເໜືອກວ່າໂມເຊ ແລະ ຄຳເວົ້າຂອງພວກເຈົ້າຍິ່ງໃຫຍ່ກວ່າເດວິດ. ເຮົາໃຫ້ພວກເຈົ້າເປັນຮ້ອຍເທົ່າ, ສະນັ້ນ ໃນທຳນອງດຽວກັນ ເຮົາຂໍໃຫ້ພວກເຈົ້າຕອບແທນເຮົາດັ່ງທີ່ເຮົາໄດ້ກະທຳຕໍ່ພວກເຈົ້າ. ພວກເຈົ້າຕ້ອງຮູ້ວ່າເຮົາແມ່ນໜຶ່ງດຽວທີ່ປະທານຊີວິດໃຫ້ແກ່ມະນຸດຊາດ ແລະ ມັນແມ່ນພວກເຈົ້າທີ່ເປັນຜູ້ໄດ້ຮັບຊີວິດຈາກເຮົາ ແລະ ຕ້ອງເປັນພະຍານໃຫ້ກັບເຮົາ. ນີ້ແມ່ນໜ້າທີ່ຂອງພວກເຈົ້າທີ່ເຮົາສົ່ງລົງມາໃຫ້ແກ່ພວກເຈົ້າ ແລະ ເປັນສິ່ງທີ່ພວກເຈົ້າຄວນເຮັດເພື່ອເຮົາ. ເຮົາໄດ້ປະທານສະຫງ່າລາສີຂອງເຮົາທັງໝົດໃຫ້ແກ່ພວກເຈົ້າ, ເຮົາໄດ້ປະທານຊີວິດໃຫ້ແກ່ພວກເຈົ້າ ເຊິ່ງເປັນຊີວິດທີ່ຄົນຖືກເລືອກ ແລະ ຊາວອິດສະຣາເອນບໍ່ເຄີຍໄດ້ຮັບ. ໂດຍຄວາມຖືກຕ້ອງແລ້ວ, ພວກເຈົ້າຄວນຈະເປັນພະຍານຕໍ່ເຮົາ ແລະ ອຸທິດຄວາມໜຸ່ມຕໍ່ເຮົາ ແລະ ປ່ອຍວາງຊີວິດຂອງພວກເຈົ້າ. ຜູ້ໃດກໍຕາມທີ່ເຮົາປະທານສະຫງ່າລາສີຂອງເຮົາໃຫ້ຄວນເປັນພະຍານໃຫ້ເຮົາ ແລະ ມອບຊີວິດຂອງພວກເຂົາໃຫ້ກັບເຮົາ. ເຮົາໄດ້ກຳນົດສິ່ງນີ້ໄວ້ລ່ວງໜ້າເປັນເວລາດົນນານແລ້ວ. ມັນເປັນໂຊກຊະຕາທີ່ດີຂອງພວກເຈົ້າທີ່ເຮົາປະທານສະຫງ່າ

ລາສີຂອງເຮົາໃຫ້ກັບພວກເຈົ້າ ແລະ ໜ້າທີ່ຂອງພວກເຈົ້າກໍຄືການເປັນປະຈັກພະຍານໃຫ້ກັບສະຫງ່າລາສີຂອງເຮົາ. ຖ້າຫາກພວກເຈົ້າພຽງແຕ່ເຊື່ອໃນເຮົາເພື່ອການຮັບພອນ, ແລ້ວພາລະກິດຂອງເຮົາກໍຈະມີຄວາມສຳຄັນໜ້ອຍທີ່ສຸດ ແລະ ພວກເຈົ້າເອງກໍຈະບໍ່ໄດ້ບັນລຸໜ້າທີ່ຂອງພວກເຈົ້າ. ຊາວອິດສະຣາເອນເຫັນພຽງແຕ່ຄວາມເມດຕາ, ຄວາມຮັກ ແລະ ຄວາມຍິ່ງໃຫຍ່ຂອງເຮົາ ແລະ ຊາວຢິວໄດ້ປະຈັກພະຍານພຽງແຕ່ຄວາມອົດທົນ ແລະ ການໄຖ່ບາບຂອງເຮົາ. ພວກເຂົາເຫັນພາລະກິດຂອງພຣະວິນຍານຂອງເຮົາໜ້ອຍຫຼາຍ, ຈົນເຖິງຈຸດທີ່ພວກເຂົາເຂົ້າໃຈພຽງແຕ່ໜຶ່ງໃນສ່ວນສິບພັນຈາກສິ່ງທີ່ພວກເຈົ້າໄດ້ຍິນ ແລະ ເຫັນ. ສິ່ງທີ່ພວກເຈົ້າໄດ້ເຫັນແມ່ນເກີນກວ່າປະໂລຫິດໃຫຍ່ຂອງພວກເຂົາ. ຄວາມຈິງທີ່ພວກເຈົ້າເຂົ້າໃຈໃນປັດຈຸບັນນີ້ແມ່ນເໜືອກວ່າພວກເຂົາ; ສິ່ງທີ່ພວກເຈົ້າໄດ້ເຫັນໃນປັດຈຸບັນນີ້ແມ່ນເກີນກວ່າສິ່ງທີ່ໄດ້ເຫັນໃນຍຸກແຫ່ງພຣະບັນຍັດ, ພ້ອມດ້ວຍໃນຍຸກແຫ່ງພຣະຄຸນ ແລະ ສິ່ງທີ່ພວກເຈົ້າໄດ້ປະສົບແມ່ນເໜືອກວ່າໂມເຊ ແລະ ເອລີຢາ. ເພາະສິ່ງທີ່ຊາວອິດສະຣາເອນເຂົ້າໃຈແມ່ນ ພຽງແຕ່ພຣະບັນຍັດຂອງພຣະເຢໂຮວາ ແລະ ສິ່ງທີ່ພວກເຂົາໄດ້ເຫັນແມ່ນພຽງພາບທາງຫຼັງຂອງພຣະເຢໂຮວາ; ສິ່ງທີ່ຊາວຢິວເຂົ້າໃຈແມ່ນພຽງແຕ່ການໄຖ່ບາບຂອງພຣະເຢຊູ, ສິ່ງທີ່ພວກເຂົາໄດ້ຮັບແມ່ນພຽງແຕ່ພຣະຄຸນທີ່ໄດ້ປະທານໃຫ້ໂດຍພຣະເຢຊູ ແລະ ສິ່ງທີ່ພວກເຂົາໄດ້ເຫັນແມ່ນພຽງແຕ່ຮູບພາບຂອງພຣະເຢຊູພາຍໃນເຮືອນຂອງຊາວຢິວເທົ່ານັ້ນ. ສິ່ງທີ່ພວກເຈົ້າເຫັນໃນມື້ນີ້ແມ່ນສະຫງ່າລາສີຂອງພຣະເຢໂຮວາ, ການໄຖ່ບາບຂອງພຣະເຢຊູ ແລະ ການກະທຳທັງໝົດຂອງເຮົາໃນປັດຈຸບັນ. ແລ້ວເຊັ່ນດຽວກັນ, ເຈົ້າກໍໄດ້ຍິນພຣະທຳຂອງພຣະວິນຍານຂອງເຮົາ, ຮູ້ຈັກຄຸນຄ່າໃນສະຕິປັນຍາຂອງເຮົາ, ຮູ້ຈັກຄວາມມະຫັດສະຈັນຂອງເຮົາ ແລະ ໄດ້ຮຽນຮູ້ເຖິງອຸປະນິໄສຂອງເຮົາ. ເຮົາຍັງໄດ້ບອກພວກເຈົ້າທັງໝົດກ່ຽວກັບແຜນການຄຸ້ມຄອງຂອງເຮົາ. ສິ່ງທີ່ພວກເຈົ້າໄດ້ເຫັນ ບໍ່ແມ່ນພຽງແຕ່ພຣະເຈົ້າທີ່ມີຄວາມສະຫງ່າງາມ ແລະ ມີຄວາມເມດຕາ, ແຕ່ເປັນພຣະເຈົ້າທີ່ເຕັມໄປດ້ວຍຄວາມຊອບທຳ. ເຈົ້າໄດ້ເຫັນພາລະກິດທີ່ໜ້າອັດສະຈັນໃຈຂອງເຈົ້າ ແລະ ຮູ້ວ່າເຮົາເຕັມໄປດ້ວຍຄວາມສະຫງ່າງາມ ແລະ ຄວາມໂກດຮ້າຍ. ຍິ່ງໄປກວ່ານັ້ນ, ເຈົ້າຮູ້ວ່າ ໃນຄັ້ງໜຶ່ງເຮົາໄດ້ນຳເອົາຄວາມໂກດຮ້າຍຂອງເຮົາລົງໃສ່ເຮືອນຂອງອິດສະຣາເອນ ແລະ ໃນມື້ນີ້ ມັນໄດ້ເກີດຂຶ້ນກັບພວກເຈົ້າແລ້ວ. ພວກເຈົ້າເຂົ້າໃຈຄວາມເລິກລັບຂອງເຮົາໃນສະຫວັນຫລາຍກວ່າເອຊາຢາ ແລະ ໂຢຮັນ; ພວກເຈົ້າຮູ້ຈັກຄວາມສະຫງ່າງາມຂອງເຮົາ ແລະ ໃຫ້ຄວາມເຄົາລົບບູຊາຫຼາຍກວ່າໄພ່ພົນທຸກຄົນໃນຍຸກສະໄໝກ່ອນ. ສິ່ງທີ່ພວກເຈົ້າໄດ້ຮັບບໍ່ແມ່ນພຽງແຕ່ຄວາມຈິງຂອງເຮົາ, ວິທີທາງຂອງເຮົາ ແລະ ຊີວິດຂອງເຮົາເທົ່ານັ້ນ, ແຕ່ແມ່ນນິມິດ ແລະ ການເປີດເຜີຍທີ່ຍິ່ງໃຫຍ່ກວ່າໂຢຮັນ. ພວກເຈົ້າເຂົ້າໃຈຄວາມເລິກລັບອີກຫຼາຍຢ່າງ ແລະ ຍັງໄດ້ເບິ່ງໃບໜ້າທີ່ແທ້ຈິງຂອງເຮົາ; ພວກເຈົ້າຍອມຮັບເອົາການພິພາກສາຂອງເຮົາຫຼາຍຂຶ້ນ ແລະ ຮູ້ຈັກອຸປະນິໄສອັນຊອບທຳຂອງເຮົາຫຼາຍຂຶ້ນ. ດັ່ງນັ້ນ, ເຖິງແມ່ນວ່າພວກເຈົ້າເກີດໃນຍຸກສຸດທ້າຍ, ຄວາມເຂົ້າໃຈຂອງພວກເຈົ້າແມ່ນເປັນແບບດັ່ງເດີມ ແລະ ແບບໃນອະດີດ ແລະ ພວກເຈົ້າຍັງໄດ້ປະສົບກັບສິ່ງຕ່າງໆໃນປັດຈຸບັນນີ້ ແລະ ສິ່ງທັງໝົດນີ້ແມ່ນກະທຳດ້ວຍຕົວເຮົາເອງ. ສິ່ງທີ່ເຮົາຂໍຈາກພວກເຈົ້າແມ່ນບໍ່ໄດ້ຫຼາຍເກີນຂອບເຂດ, ເພາະວ່າເຮົາໄດ້ໃຫ້ພວກເຈົ້າຫຼາຍກວ່ານັ້ນ ແລະ ພວກເຈົ້າ

ໄດ້ເຫັນຫຼາຍສິ່ງຫຼາຍຢ່າງໃນຕົວເຮົາ. ສະນັ້ນ, ເຮົາຂໍໃຫ້ພວກເຈົ້າຈົ່ງເປັນພະຍານຕໍ່ເຮົາ, ຕໍ່ໄພ່ພົນໃນສະໄໝກ່ອນ ແລະ ນີ້ຄືຫົວໃຈຂອງເຮົາພຽງປາດຖະໜາເທົ່ານັ້ນ.

ພຣະບິດາຂອງເຮົາ ແມ່ນຜູ້ທຳອິດທີ່ເປັນພະຍານໃຫ້ເຮົາ, ແຕ່ວ່າເຮົາປາດຖະໜາທີ່ຈະຮັບຄວາມສະຫງ່າລາສີທີ່ຍິ່ງໃຫຍ່ກວ່າ ແລະ ສຳລັບພຣະທຳຂອງການເປັນພະຍານທີ່ອອກມາຈາກປາກຂອງບຸກຄົນທີ່ຖືກສ້າງ, ດ້ວຍເຫດນັ້ນ ເຮົາໄດ້ໃຫ້ທັງໝົດທີ່ເຮົາມີແກ່ພວກເຈົ້າ ເພື່ອພວກເຈົ້າອາດສາມາດສຳເລັດໜ້າທີ່ຂອງພວກເຈົ້າ ແລະ ນຳພາລະກິດຂອງເຮົາໄປສູ່ທ່າມກາງມະນຸດຈົນເຖິງຂັ້ນສຸດທ້າຍ. ພວກເຈົ້າຄວນເຂົ້າໃຈເປັນຫຍັງ ພວກເຈົ້າຈຶ່ງເຊື່ອໃນຕົວເຮົາ; ຖ້າພວກເຈົ້າພຽງຕ້ອງການທີ່ຈະເປັນລູກສິດ ຫຼື ຄົນເຈັບຂອງເຮົາ ຫຼື ກາຍເປັນໜຶ່ງ ໃນໄພ່ພົນຂອງເຮົາໃນສະຫວັນ, ຖ້າເປັນດັ່ງນັ້ນ ການຕິດຕາມຂອງພວກເຈົ້າຕໍ່ກັບເຮົາຈະບໍ່ມີຄວາມໝາຍຫຍັງ. ການຕິດຕາມເຮົາແບບນີ້ ແມ່ນເປັນການສູນເສຍເຫື່ອແຮງ; ການມີສັດທາກັບເຮົາແບບນີ້ຈະພຽງແຕ່ເຮັດໃຫ້ວັນເວລາຂອງເຈົ້າໝົດໄປ, ເຮັດໃຫ້ເວລາໄວໜຸ່ມຂອງເຈົ້າເສຍຖິ້ມໄປລ້າໆ. ໃນທີ່ສຸດ, ພວກເຈົ້າຈະບໍ່ໄດ້ຮັບຫຍັງເລີຍ. ນັ້ນບໍ່ແມ່ນການກະທຳທີ່ບໍ່ມີປະໂຫຍດຫຍັງບໍ? ເຮົາໄດ້ຈາກຊາວຢິວມາເປັນເວລາດົນນານແລ້ວ ແລະ ເຮົາບໍ່ແມ່ນແພດຂອງມະນຸດ ແລະ ຢາສຳລັບມະນຸດອີກຕໍ່ໄປ. ເຮົາບໍ່ແມ່ນສັດເດຍລະສານທີ່ເປັນພາລະສຳລັບມະນຸດຂັບໄລ່ ຫຼື ເຂັ່ນຂ້າຢ່າງຕາມໃຈອີກຕໍ່ໄປ; ໃນທາງກົງກັນຂ້າມ, ເຮົາໄດ້ປາກົດໃນບັນດາມະນຸດເພື່ອຕັດສິນ ແລະ ຂ້ຽນຕີມະນຸດ ເພື່ອມະນຸດອາດຈະໄດ້ຮູ້ຈັກເຮົາ. ພວກເຈົ້າຄວນຮູ້ວ່າເຮົາເຄີຍປະຕິບັດພາລະກິດໃນການໄຖ່ບາບ; ເຮົາເຄີຍເປັນພຣະເຢຊູ ແຕ່ເຮົາບໍ່ສາມາດເປັນພຣະເຢຊູຕະຫຼອດໄປ, ເໝືອນດັ່ງຄັ້ງໜຶ່ງເຮົາເຄີຍເປັນ ພຣະເຢໂຮວາ ແຕ່ຕໍ່ມາກາຍເປັນພຣະເຢຊູ. ເຮົາແມ່ນພຣະເຈົ້າຂອງມະນຸດໂລກ, ພຣະເຈົ້າຂອງການສ້າງ, ແຕ່ວ່າເຮົາບໍ່ສາມາດຢູ່ເປັນພຣະເຢຊູ ຫຼື ພຣະເຢໂຮວາຕະຫຼອດໄປ. ເຮົາເຄີຍຖືກຖືວ່າເປັນແພດໝໍໂດຍມະນຸດ, ແຕ່ບໍ່ສາມາດເວົ້າໄດ້ວ່າ ພຣະເຈົ້າເປັນພຽງແພດສຳລັບມະນຸດຊາດ. ດ້ວຍເຫດນັ້ນ, ຖ້າພວກເຈົ້າມີທັດສະນະໃນການສັດທາແບບເກົ່າຕໍ່ເຮົາ, ພວກເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ. ບໍ່ວ່າພວກເຈົ້າຈະສັນລະເສີນເຮົາແນວໃດກໍ່ຕາມໃນມື້ນີ້: "ພຣະເຈົ້າຮັກມະນຸດຫຼາຍສໍ່າໃດ; ພຣະອົງຮັກສາຂ້ານ້ອຍ ແລະ ໃຫ້ພອນ, ຄວາມສັນຕິສຸກ ແລະ ຄວາມສຸກແກ່ຂ້ານ້ອຍ. ພຣະເຈົ້າດີຕໍ່ກັບມະນຸດສໍ່າໃດ; ຖ້າຫາກພວກເຮົາສັດທາໃນພຣະອົງ, ພວກເຮົາກໍບໍ່ຈຳເປັນຕ້ອງມີຄວາມກັງວົນກ່ຽວກັບເງິນ ແລະ ຄວາມຮັ່ງມີ..." ເຮົາຍັງຄົງບໍ່ສາມາດປ່ຽນແປງພາລະກິດດັ່ງເດີມຂອງເຮົາ. ຖ້າຫາກເຈົ້າເຊື່ອໃນເຮົາໃນມື້ນີ້, ເຈົ້າຈະໄດ້ຮັບພຽງແຕ່ຄວາມສະຫງ່າລາສີຂອງເຮົາ ແລະ ມີຄຸນຄ່າທີ່ຈະເປັນພະຍານໃຫ້ເຮົາ ແລະ ສິ່ງອື່ນໆ ແມ່ນຈະເປັນອັນດັບສອງຮອງລົງມາ. ສິ່ງນີ້ເຈົ້າຕ້ອງຮູ້ຢ່າງຈະແຈ້ງ.

ບັດນີ້ ເຈົ້າຮູ້ສາຍເຫດທີ່ແທ້ຈິງແລ້ວບໍ່ວ່າ ເປັນຫຍັງພວກເຈົ້າຈຶ່ງເຊື່ອໃນເຮົາ? ພວກເຈົ້າຮູ້ຈຸດປະສົງ ແລະ ຄວາມໝາຍທີ່ແທ້ຈິງຂອງພາລະກິດຂອງເຮົາບໍ່? ເຈົ້າຮູ້ໜ້າທີ່ທີ່ແທ້ຈິງຂອງເຈົ້າແລ້ວບໍ່? ເຈົ້າຮູ້ການເປັນປະຈັກພະຍານຂອງເຮົາຢ່າງແທ້ຈິງບໍ່? ຖ້າຫາກເຈົ້າພຽງແຕ່ເຊື່ອໃນເຮົາ, ແຕ່ຍັງບໍ່ມີວີ່ແວວຄວາມສະຫງ່າລາສີ ຫຼື ປະຈັກພະຍານຂອງເຮົາໃນຕົວເຈົ້າ, ແລ້ວເຮົາກໍໄດ້ກຳຈັດພວກເຈົ້າ

ໄປດົນນານແລ້ວ. ສຳລັບຜູ້ທີ່ຮູ້ຈັກທຸກຢ່າງ, ພວກເຂົາຍິ່ງເປັນສ້ຽນໜາມໃນຕາຂອງເຮົາ ແລະ ໃນເຮືອນຂອງເຮົາ, ພວກເຂົາບໍ່ແມ່ນຫຍັງນອກຈາກເປັນອຸປະສັກທີ່ຂວາງທາງຂອງເຮົາ, ພວກເຂົາເປັນເຂົ້ານົກທີ່ຕ້ອງຖືກຝັດຖິ້ມໃຫ້ໝົດໃນພາລະກິດຂອງເຮົາ, ພວກເຂົາໃຊ້ການບໍ່ໄດ້, ພວກເຂົາບໍ່ມີຄຸນຄ່າຫຍັງເລີຍ ແລະ ເຮົາໄດ້ລັງກຽດພວກເຂົາມາເປັນເວລາດົນແລ້ວ. ຄວາມໂກດຮ້າຍຂອງເຮົາຈະໂຍນລົງໃສ່ກັບທຸກຄົນທີ່ບໍ່ເປັນປະຈັກພະຍານ ແລະ ໄມ້ຄ້ອນເທົ້າຂອງເຮົາຈະບໍ່ເຄີຍຫ່າງຈາກພວກເຂົາ. ເຮົາໄດ້ມອບພວກເຂົາໄວ້ໃນກຳມືຂອງມານຮ້າຍມາດົນນານແລ້ວ; ພວກເຂົາບໍ່ໄດ້ຮັບພອນຂອງເຮົາ. ເມື່ອມື້ນັ້ນມາເຖິງ, ການຂ້ຽນຕີຂອງພວກເຂົາຈະໂສກເສົ້າຫຼາຍກວ່າຜູ້ຍິງໂງ່. ມື້ນີ້, ເຮົາພຽງແຕ່ປະຕິບັດພາລະກິດຕາມໜ້າທີ່ຂອງເຮົາ; ເຮົາຈະມັດກົກເຂົ້າສາລີທັງໝົດ ພ້ອມກັບເຂົ້ານົກເຫຼົ່ານັ້ນເຂົ້າກັນ. ນີ້ແມ່ນພາລະກິດຂອງເຮົາໃນມື້ນີ້. ເຂົ້ານົກທັງໝົດຈະຖືກຝັດຖິ້ມໃນເວລາຂອງການຝັດເຂົ້າຂອງເຮົາ, ຫຼັງຈາກນັ້ນ ເມັດເຂົ້າສາລີຈະຖືກເກັບຮັກສາໄວ້ໃນສາງ ແລະ ເຂົ້ານົກເຫຼົ່ານັ້ນທີ່ຖືກຝັດອອກຈະຖືກນຳໄປຈູດເຜົາໃນໄຟໃຫ້ໄໝ້ກາຍເປັນຂີ້ຝຸ່ນ. ພາລະກິດຂອງເຮົາໃນຕອນນີ້ແມ່ນພຽງແຕ່ມັດມະນຸດທຸກຄົນເຂົ້າກັນນັ້ນກໍຄືເພື່ອເອົາຊະນະພວກເຂົາຢ່າງສິ້ນເຊີງ. ຫຼັງຈາກນັ້ນ ເຮົາຈະເລີ່ມຝັດເພື່ອເປີດເຜີຍຈຸດຈົບຂອງມະນຸດທັງໝົດ. ບັດນີ້ ເຈົ້າຄວນຈະຮູ້ວ່າເຈົ້າຄວນຈະເຮັດໃຫ້ເຮົາພໍໃຈແນວໃດ ແລະ ເຈົ້າຄວນຈະກຳນົດເສັ້ນທາງທີ່ຖືກຕ້ອງແນວໃດໃນຄວາມສັດທາຂອງເຈົ້າໃນເຮົາ. ສິ່ງທີ່ເຮົາປາດຖະໜາຈາກເຈົ້າໃນຕອນນີ້ກໍຄືຄວາມຈົງຮັກພັກດີ ແລະ ການເຊື່ອຟັງຂອງເຈົ້າ, ຄວາມຮັກ ແລະ ການເປັນປະຈັກພະຍານຂອງເຈົ້າ. ເຖິງແມ່ນວ່າ ໃນຕອນນີ້ເຈົ້າບໍ່ຮູ້ວ່າການເປັນປະຈັກພະຍານແມ່ນຫຍັງ ຫຼື ຄວາມຮັກແມ່ນຫຍັງ, ເຈົ້າຄວນມອບໃຫ້ເຮົາທັງໝົດທີ່ເຈົ້າມີ ແລະ ຍົກສົມບັດຊິ້ນດຽວທີ່ເຈົ້າມີໃຫ້ເຮົາ: ຄວາມຈົງຮັກພັກດີ ແລະ ການເຊື່ອຟັງຂອງເຈົ້າ. ເຈົ້າຄວນຮູ້ວ່າການເປັນປະຈັກພະຍານຕໍ່ການເອົາຊະນະຊາຕານຂອງເຮົາຂຶ້ນຢູ່ກັບຄວາມຈົງຮັກພັກດີ ແລະ ການເຊື່ອຟັງຂອງມະນຸດ, ເຊັ່ນດຽວກັນ ການເປັນປະຈັກພະຍານຕໍ່ການເອົາຊະນະມະນຸດທັງໝົດຂອງເຮົາ. ໜ້າທີ່ໃນຄວາມສັດທາຂອງພວກເຈົ້າທີ່ມີຕໍ່ເຮົາແມ່ນເພື່ອເປັນພະຍານໃຫ້ກັບເຮົາ, ເພື່ອສະແດງຄວາມຈົງຮັກພັກດີຕໍ່ເຮົາ ແລະ ບໍ່ແມ່ນສິ່ງໃດທັງສິ້ນ ແລະ ເພື່ອເຊື່ອຟັງຈົນເຖິງທີ່ສຸດ. ກ່ອນທີ່ເຮົາຈະເລີ່ມຂັ້ນຕອນຕໍ່ໄປໃນພາລະກິດຂອງເຮົາ, ເຈົ້າຈະເປັນພະຍານຕໍ່ເຮົາແນວໃດ? ເຈົ້າຈະຈົງຮັກພັກດີ ແລະ ເຊື່ອຟັງເຮົາແນວໃດ? ເຈົ້າຈະອຸທິດຄວາມຈົງຮັກພັກດີຂອງເຈົ້າທັງໝົດຕໍ່ໜ້າທີ່ຂອງເຈົ້າບໍ ຫຼື ເຈົ້າພຽງແຕ່ຈະຍອມຈຳນົນເທົ່ານັ້ນບໍ? ເຈົ້າຈະຍອມຮັບເອົາການຈັດແຈງທຸກຢ່າງຂອງເຮົາ (ເຖິງມັນຈະເປັນຄວາມຕາຍ ຫຼື ການທຳລາຍ) ຫຼື ຈະໜີໄປກາງທາງເພື່ອຫຼີກເວັ້ນການຂ້ຽນຕີຂອງເຮົາ? ເຮົາຂ້ຽນຕີເຈົ້າ ເພື່ອວ່າ ເຈົ້າຈະເປັນພະຍານຕໍ່ເຮົາ ແລະ ຈົງຮັກພັກດີ ແລະ ເຊື່ອຟັງເຮົາ. ຍິ່ງໄປກວ່ານັ້ນ, ການຂ້ຽນຕີໃນປັດຈຸບັນ ແມ່ນການເປີດເຜີຍຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາ ແລະ ເພື່ອເຮັດໃຫ້ພາລະກິດມີຄວາມກ້າວໜ້າຢ່າງບໍ່ມີສິ່ງໃດກີດຂວາງທັງນັ້ນ. ເພາະສະນັ້ນ, ເຮົາຂໍແນະນຳໃຫ້ເຈົ້າເປັນຄົນສະຫຼາດ ແລະ ປະຕິບັດຕໍ່ຊີວິດຂອງເຈົ້າ ຫຼື ຄວາມໝາຍຂອງການມີຊີວິດຂອງເຈົ້າບໍ່ໃຫ້ຄືກັບດິນຊາຍທີ່ບໍ່ມີຄຸນຄ່າ. ເຈົ້າສາມາດຮູ້ໄດ້ຢ່າງແນ່ນອນບໍ່ວ່າພາລະກິດຂອງເຮົາທີ່ຈະມາເຖິງແມ່ນຫຍັງ? ເຈົ້າຮູ້ບໍວ່າ

ເຮົາຈະປະຕິບັດພາລະກິດແບບໃດໃນວັນຂ້າງໜ້າ ແລະ ພາລະກິດຂອງເຮົາຈະດຳເນີນການແບບໃດ? ເຈົ້າຄວນຮູ້ຄວາມໝາຍຂອງປະສົບການຂອງເຈົ້າໃນພາລະກິດຂອງເຮົາ ແລະ ຍິ່ງໄປກວ່ານັ້ນ, ຄວາມໝາຍຂອງຄວາມສັດທາຂອງພວກເຈົ້າໃນເຮົາ. ເຮົາໄດ້ເຮັດມາຫຼາຍແລ້ວ; ເຮົາຈະຍອມຈຳນົນກາງທາງດັ່ງທີ່ເຈົ້າຈິນຕະນາການໄດ້ແນວໃດ? ເຮົາໄດ້ເຮັດພາລະກິດຢ່າງຫຼວງຫຼາຍ; ເຮົາຈະທຳລາຍມັນໄດ້ແນວໃດ? ແທ້ຈິງແລ້ວ, ເຮົາໄດ້ມາເພື່ອເຮັດໃຫ້ຍຸກນີ້ສິ້ນສຸດລົງ. ນີ້ແມ່ນຄວາມຈິງ, ແຕ່ຍິ່ງໄປກວ່ານັ້ນ ເຈົ້າຕ້ອງຮູ້ວ່າ ເຮົາຈະເລີ່ມຕົ້ນຍຸກໃໝ່, ເລີ່ມຕົ້ນພາລະກິດໃໝ່ ແລະ ສຳຄັນໄປກວ່ານັ້ນແມ່ນເພື່ອເຜີຍແຜ່ຂ່າວປະເສີດຂອງອານາຈັກ. ສະນັ້ນ ເຈົ້າຄວນຮູ້ວ່າ ພາລະກິດໃນປັດຈຸບັນ ແມ່ນພຽງແຕ່ເປັນການເລີ່ມຕົ້ນຂອງຍຸກ ແລະ ວາງພື້ນຖານສຳລັບການເຜີຍແຜ່ຂ່າວປະເສີດໃນອະນາຄົດ ແລະ ເຮັດໃຫ້ຍຸກນີ້ສິ້ນສຸດລົງໃນອະນາຄົດ. ພາລະກິດຂອງເຮົາບໍ່ແມ່ນເລື່ອງງ່າຍດາຍດັ່ງທີ່ເຈົ້າຄິດ ແລະ ມັນບໍ່ມີຄ່າຫຼື ບໍ່ມີຄວາມໝາຍຄືກັບເຈົ້າເຊື່ອ. ສະນັ້ນ ເຮົາຍັງຕ້ອງເວົ້າກັບເຈົ້າວ່າ: ເຈົ້າຄວນສະຫຼະຊີວິດຂອງເຈົ້າໃຫ້ກັບພາລະກິດຂອງເຮົາ ແລະ ຍິ່ງໄປກວ່ານັ້ນ, ເຈົ້າຄວນອຸທິດຕົວເຈົ້າເອງຕໍ່ຄວາມສະຫງ່າລາສີຂອງເຮົາ. ເຮົາປາຖະໜາໃຫ້ເຈົ້າເປັນພະຍານຕໍ່ເຮົາມາດົນນານແລ້ວ ແລະ ຍິ່ງໄປກວ່ານັ້ນ ເຮົາປາຖະໜາໃຫ້ເຈົ້າເຜີຍແຜ່ຂ່າວປະເສີດຂອງເຮົາ. ເຈົ້າຄວນເຂົ້າໃຈສິ່ງທີ່ຢູ່ໃນໃຈຂອງເຮົາ.

# ເມື່ອໃບໄມ້ທີ່ຫຼົ່ນໄດ້ກັບຄືນສູ່ຮາກເຫງົ້າຂອງມັນ, ເຈົ້າຈະເສຍໃຈກັບສິ່ງຊົ່ວຮ້າຍທີ່ເຈົ້າໄດ້ເຮັດ

ພວກເຈົ້າທຸກຄົນໄດ້ເຫັນພາລະກິດທີ່ເຮົາໄດ້ເຮັດທ່າມກາງພວກເຈົ້າດ້ວຍຕາຂອງພວກເຈົ້າເອງ, ພວກເຈົ້າເອງແມ່ນໄດ້ຮັບຟັງພຣະທຳທີ່ເຮົາໄດ້ກ່າວ ແລະ ພວກເຈົ້າທຸກຄົນແມ່ນໄດ້ຮູ້ຈັກທ່າທີທີ່ເຮົາມີຕໍ່ພວກເຈົ້າ, ສະນັ້ນ ພວກເຈົ້າກໍຄວນຮູ້ວ່າ ເປັນຫຍັງເຮົາຈິ່ງເຮັດພາລະກິດນີ້ໃນຕົວພວກເຈົ້າ. ເຮົາຂໍບອກພວກເຈົ້າຕາມຕົງວ່າ ພວກເຈົ້າບໍ່ມີຄວາມສຳຄັນຫຍັງ ນອກຈາກແຕ່ເປັນເຄື່ອງມືສຳລັບພາລະກິດແຫ່ງການເອົາຊະນະຂອງເຮົາໃນຍຸກສຸດທ້າຍ ແລະ ເປັນເຄື່ອງໃຊ້ສຳລັບການຂະຫຍາຍພາລະກິດຂອງເຮົາໃນຊາດທີ່ບໍ່ແມ່ນຊາດຂອງຊາວຢິວ. ເຮົາເວົ້າຜ່ານຄວາມບໍ່ຊອບທຳ, ຄວາມສົກກະປົກ, ການຕໍ່ຕ້ານ ແລະ ການກະບົດຂອງພວກເຈົ້າ ເພື່ອຂະຫຍາຍພາລະກິດຂອງເຮົາໃຫ້ກວ້າງກວ່າເກົ່າ ແລະ ເຜີຍແຜ່ຊື່ຂອງເຮົາໃນທ່າມກາງຊາດທີ່ບໍ່ແມ່ນຊາດຂອງຊາວຢິວ ເຊິ່ງກໍຄືການເຜີຍແຜ່ພາລະກິດໃນບັນດາຊາດຕ່າງໆນອກເໜືອຈາກອິດສະຣາເອນ. ນີ້ກໍເພື່ອວ່າ ຊື່ຂອງເຮົາ, ການກະທຳຂອງເຮົາ ແລະ ສຽງຂອງເຮົາອາດໄດ້ຮັບການເຜີຍແຜ່ໄປທົ່ວຊາດຕ່າງໆທີ່ບໍ່ແມ່ນຊາດຂອງຊາວຢິວ ເຊິ່ງດ້ວຍເຫດນັ້ນ ບັນດາຊາດເຫຼົ່ານັ້ນທັງໝົດທີ່ບໍ່ແມ່ນອິດສະຣາເອນອາດຖືກເຮົາເອົາຊະນະ ແລະ ອາດນະມັດສະການເຮົາ ແລ້ວກາຍເປັນດິນແດນສັກສິດທີ່ຢູ່ນອກດິນແດນອິດສະຣາເອນ ແລະ ເອຢິບ. ການຂະຫຍາຍພາລະກິດຂອງເຮົາທີ່ຈິງແລ້ວແມ່ນການຂະຫຍາຍພາລະກິດແຫ່ງການເອົາຊະນະຂອງເຮົາ ແລະ ແມ່ນການຂະຫຍາຍດິນແດນສັກສິດ; ມັນແມ່ນການຂະຫຍາຍຖານທີ່ໝັ້ນຂອງເຮົາຢູ່ແຜ່ນດິນໂລກ. ພວກເຈົ້າຄວນມີຄວາມຊັດເຈນວ່າ ພວກເຈົ້າແມ່ນພຽງແຕ່ສິ່ງຊີວິດສ້າງທ່າມກາງຕ່າງຊາດທີ່ບໍ່ແມ່ນຊາດຂອງຊາວຢິວທີ່ເຮົາໄດ້ເອົາຊະນະ. ໂດຍແທ້ຈິງແລ້ວ, ພວກເຈົ້າບໍ່ມີສະຖານະ ຫຼື ຄຸນຄ່າເພື່ອການນຳໃຊ້ ແລະ ບໍ່ໄດ້ຖືກນຳໃຊ້ຫຍັງເລີຍ. ມັນເປັນພຽງເພາະວ່າ ເຮົາໄດ້ຍົກພວກໂຕໜອນຂຶ້ນຈາກກອງຂີ້ສັດ ເພື່ອມາເປັນຕົວຢ່າງຂອງການເອົາຊະນະດິນແດນທັງໝົດຂອງເຮົາ ແລະ ເພື່ອເປັນ "ສິ່ງອ້າງອີງ" ສຳລັບການເອົາຊະນະດິນແດນທັງໝົດຂອງເຮົາ, ພວກເຈົ້າຈຶ່ງໄດ້ໂຊກດີພໍທີ່ໄດ້ມາພົບກັບເຮົາ ແລະ ມາເຕົ້າໂຮມຢູ່ກັບເຮົາໃນຕອນນີ້. ຍ້ອນສະຖານະທີ່ຕໍ່າຕ້ອຍຂອງພວກເຈົ້າ ທີ່ເຮັດໃຫ້ເຮົາເລືອກພວກເຈົ້າມາເປັນຕົວຢ່າງ ແລະ ຕົວແບບຂອງພາລະກິດແຫ່ງການເອົາຊະນະຂອງເຮົາ. ຍ້ອນເຫດຜົນນີ້ເທົ່ານັ້ນ ທີ່ເຮັດໃຫ້ເຮົາໄດ້ເຮັດພາລະກິດ ແລະ ເວົ້າໃນທ່າມກາງພວກເຈົ້າ ແລະ ເຮັດໃຫ້ເຮົາອາໄສ ແລະ ພັກແຮມຢູ່ກັບພວກເຈົ້າ. ພວກເຈົ້າຄວນຮູ້ວ່າ ຍ້ອນການຄຸ້ມຄອງຂອງເຮົາເທົ່ານັ້ນ ແລະ ເນື່ອງຈາກຄວາມກຽດຊັງຂອງເຮົາທີ່ມີຫຼາຍທີ່ສຸດຕໍ່ພວກໜອນຄືພວກເຈົ້າທີ່ຢູ່ໃນກອງຂີ້ສັດ ທີ່ເຮັດໃຫ້ເຮົາເວົ້າໃນທ່າມກາງພວກເຈົ້າ ແລະ ມັນເຖິງຈຸດທີ່ເຮັດໃຫ້ເຮົາໃຈຮ້າຍຫຼາຍ. ພາລະກິດຂອງເຮົາໃນທ່າມກາງພວກເຈົ້າບໍ່ແມ່ນພາລະກິດດຽວກັນກັບຂອງພຣະເຢໂຮວາໃນອິດສະຣາເອນ ແລະ ໂດຍສະເພາະບໍ່ແມ່ນພາລະກິດດຽວກັນກັບທີ່ພຣະເຢຊູເຮັດໃນຢູດາຍ. ເຮົາເວົ້າ ແລະ ເຮັດພາລະກິດດ້ວຍຄວາມອົດທົນຢ່າງຫຼວງຫຼາຍ ແລະ ພ້ອມນີ້ ເຮົາຍັງເອົາຊະນະສິ່ງເສື່ອມຊາມເຫຼົ່ານີ້ດ້ວຍຄວາມໂມໂຫ ແລະ ການ

ພິພາກສາອີກດ້ວຍ. ມັນບໍ່ຄືກັນກັບການທີ່ພຣະເຢໂຮວານຳພາຜູ້ຄົນຂອງພຣະອົງໃນອິດສະຣາເອນ. ພາລະກິດຂອງພຣະອົງໃນອິດສະຣາເອນ ແມ່ນເພື່ອປະທານອາຫານ ແລະ ນໍ້າຫຼໍ່ລ້ຽງຊີວິດ ແລະ ພຣະອົງແມ່ນເຕັມໄປດ້ວຍຄວາມເຫັນອົກເຫັນໃຈ ແລະ ຄວາມຮັກທີ່ມີຕໍ່ຜູ້ຄົນຂອງພຣະອົງໃນຂະນະທີ່ກະທຳການສະໜອງໃຫ້ແກ່ພວກເຂົາ. ພາລະກິດໃນມື້ນີ້ແມ່ນຖືກເຮັດໃນທ່າມກາງຊາດທີ່ຖືກສາບແຊ່ງຂອງຜູ້ຄົນທີ່ບໍ່ໄດ້ຖືກເລືອກ. ບໍ່ມີອາຫານທີ່ອຸດົມສົມບູນ ຫຼື ນໍ້າຫຼໍ່ລ້ຽງຊີວິດເພື່ອດັບຄວາມກະຫາຍ ແລ້ວແຮງໄກທີ່ຈະມີວັດສະດຸດີໆທີ່ພຽງພໍ; ມີແຕ່ການພິພາກສາ, ຄຳສາບແຊ່ງ ແລະ ການຂ້ຽນຕີເທົ່ານັ້ນທີ່ມີຫຼາຍພໍ. ພວກໂຕໜອນເຫຼົ່ານີ້ ທີ່ອາໄສຢູ່ໃນກອງຂີ້ສັດ ແມ່ນບໍ່ຄູ່ຄວນທີ່ສຸດທີ່ຈະໄດ້ຮັບພູເຂົາທີ່ເຕັມໄປດ້ວຍຝູງງົວ ແລະ ແກະ, ຄວາມຮັ່ງມີຢ່າງມະຫາສານ ແລະ ລູກເຕົ້າທີ່ສວຍງາມທີ່ສຸດທີ່ມີຢູ່ທົ່ວບ້ານທົ່ວເມືອງ ທີ່ເຮົາໄດ້ປະທານໃຫ້ອິດສະຣາເອນ. ອິດສະຣາເອນສະໄໝໃໝ່ໄດ້ນຳເອົາຝູງງົວ, ແກະ, ເຄື່ອງຄຳ ແລະ ເຄື່ອງເງິນ ທີ່ເຮົາໄດ້ມອບໃຫ້ແກ່ຜູ້ຄົນຂອງອິດສະຣາເອນ ມາບູຊາຢູ່ແທ່ນບູຊາ ໂດຍມີຈຳນວນຫຼາຍກວ່າໜຶ່ງສ່ວນສິບທີ່ພຣະເຢໂຮວາຕ້ອງການພາຍໃຕ້ກົດເກນ ເຊິ່ງດ້ວຍເຫດນັ້ນ ເຮົາຈຶ່ງໄດ້ມອບໃຫ້ພວກເຂົາຫຼາຍກວ່າເກົ່າ ກໍຄືຫຼາຍກວ່າຮ້ອຍເທົ່າທີ່ອິດສະຣາເອນໄດ້ຮັບພາຍໃຕ້ກົດເກນ. ສິ່ງທີ່ເຮົາຫຼໍ່ລ້ຽງໃຫ້ອິດສະຣາເອນ ແມ່ນມີຫຼາຍກວ່າສິ່ງທີ່ອັບຣາຮາມໄດ້ຮັບທັງໝົດ ແລະ ມີຫຼາຍກວ່າສິ່ງທີ່ອີຊາກໄດ້ຮັບທັງໝົດ. ເຮົາຈະເຮັດໃຫ້ຄອບຄົວຂອງອິດສະຣາເອນອຸດົມສົມບູນ ແລະ ເພີ່ມຈຳນວນຂຶ້ນ ແລະ ເຮົາຈະເຮັດໃຫ້ຜູ້ຄົນຂອງເຮົາທີ່ຢູ່ໃນອິດສະຣາເອນແຜ່ຂະຫຍາຍໄປທົ່ວແຜ່ນດິນໂລກ. ຜູ້ທີ່ເຮົາອວຍພອນ ແລະ ຫ່ວງໃຍຍັງແມ່ນປະຊາຊົນຂອງອິດສະຣາເອນທີ່ຖືກເລືອກນັ້ນກໍຄືຜູ້ຄົນທີ່ໄດ້ອຸທິດທຸກສິ່ງທຸກຢ່າງເພື່ອເຮົາ ແລະ ຜູ້ທີ່ໄດ້ຮັບທຸກສິ່ງທຸກຢ່າງຈາກເຮົາ. ຍ້ອນວ່າພວກເຂົາເກັບເຮົາໄວ້ໃນຈິດໃຈ ເຊິ່ງເຮັດໃຫ້ພວກເຂົາໄດ້ນຳເອົາລູກງົວ ແລະ ລູກແກະທີ່ເກີດໃໝ່ຂອງພວກເຂົາມາບູຊາຢູ່ເທິງແທ່ນບູຊາອັນສັກສິດຂອງເຮົາ ແລະ ໄດ້ຖວາຍທຸກສິ່ງທີ່ພວກເຂົາມີໃຫ້ເຮົາຈົນເຖິງຂັ້ນຖວາຍລູກຊາຍຄົນທຳອິດທີ່ເກີດໃໝ່ຂອງພວກເຂົາ ໃນການລໍຖ້າຢ່າງຄາດຫວັງກັບການຄືນມາຂອງເຮົາ. ແລ້ວພວກເຈົ້າເດ? ພວກເຈົ້າໄດ້ປຸກຄວາມໂມໂຫຂອງເຮົາ, ຮຽກຮ້ອງຈາກເຮົາ ແລະ ລັກເຄື່ອງບູຊາຂອງຜູ້ອື່ນທີ່ໄດ້ນຳມາຖວາຍໃຫ້ເຮົາ ແລະ ພວກເຈົ້າບໍ່ຮູ້ວ່າ ພວກເຈົ້າກຳລັງລ່ວງເກີນເຮົາ; ດ້ວຍເຫດນັ້ນ, ສິ່ງດຽວທີ່ພວກເຈົ້າໄດ້ຮັບແມ່ນການຮ້ອງໄຫ້ ແລະ ການລົງໂທດຢູ່ໃນຄວາມມືດ. ພວກເຈົ້າໄດ້ຍຸແຍ່ຄວາມໂມໂຫຂອງເຮົາຫຼາຍຄັ້ງ ແລະ ເຮົາໄດ້ປ່ອຍໄຟທີ່ເຜົາໄໝ້ຂອງເຮົາລົງມາຈົນເຖິງຂັ້ນທີ່ວ່າ ບາງຄົນຕ້ອງພົບກັບຈຸດຈົບອັນໜ້າອະນາດ ແລະ ເຮືອນຊານທີ່ມີຄວາມສຸກແມ່ນໄດ້ກາຍເປັນຂຸມຝັງສົບທີ່ເປົ່າປ່ຽວ. ສິ່ງດຽວທີ່ເຮົາມີສຳລັບພວກໜອນເຫຼົ່ານີ້ແມ່ນຄວາມໂມໂຫທີ່ບໍ່ສິ້ນສຸດ ແລະ ເຮົາບໍ່ມີເຈດຕະນາທີ່ຈະໃຫ້ພອນແກ່ພວກເຂົາ. ເຮົາໄດ້ກະທຳການຍົກເວັ້ນ, ຍົກພວກເຈົ້າຂຶ້ນ, ອົດກັ້ນຕໍ່ຄວາມອັບອາຍອັນຍິ່ງໃຫຍ່ ແລະ ໄດ້ເຮັດພາລະກິດໃນພວກເຈົ້າກໍເພື່ອປະໂຫຍດຂອງພາລະກິດຂອງເຮົາເທົ່ານັ້ນ. ຖ້າບໍ່ແມ່ນຍ້ອນຄວາມປະສົງຂອງພຣະບິດາຂອງເຮົາ, ເຮົາຈະສາມາດອາໄສຢູ່ໃນເຮືອນຫຼັງດຽວກັນກັບໜອນທີ່ກິ້ງໄປກິ້ງມາໃນກອງຂີ້ສັດໄດ້ແນວໃດ? ເຮົາຮູ້ສຶກລັງກຽດການກະທຳ ແລະ ຄຳເວົ້າຂອງພວກເຈົ້າທຸກຄົນຫຼາຍ ແລະ ຢ່າງໃດກໍຕາມ ເພາະວ່າ ເຮົາມີ

“ຄວາມສົນໃຈ” ໜ້ອຍໜຶ່ງໃນຄວາມສົກກະປົກ ແລະ ຄວາມກະບົດຂອງພວກເຈົ້າ, ສິ່ງນີ້ເລີຍໄດ້ກາຍເປັນສູນລວມພຣະທຳອັນຍິ່ງໃຫຍ່ຂອງເຮົາ. ບໍ່ສະນັ້ນ ເຮົາກໍຈະບໍ່ໄດ້ຢູ່ໃນທ່າມກາງພວກເຈົ້າເປັນເວລາດົນນານຢ່າງແນ່ນອນ. ດັ່ງນັ້ນ, ພວກເຈົ້າຄວນຮູ້ວ່າ ທັດສະນະຄະຕິຂອງເຮົາທີ່ມີຕໍ່ພວກເຈົ້າແມ່ນພຽງແຕ່ຄວາມເຫັນໃຈ ແລະ ຄວາມອິດູສົງສານ; ເຮົາບໍ່ມີຄວາມຮັກໃຫ້ພວກເຈົ້າແມ່ນແຕ່ຢິດໜຶ່ງ. ສິ່ງທີ່ເຮົາມີສຳລັບພວກເຈົ້າແມ່ນພຽງແຕ່ຄວາມອົດກັ້ນ ເພາະວ່າ ເຮົາເຮັດສິ່ງນີ້ເພື່ອປະໂຫຍດຂອງພາລະກິດຂອງເຮົາເທົ່ານັ້ນ. ພວກເຈົ້າໄດ້ເຫັນການກະທຳຂອງເຮົາ ເພາະວ່າ ເຮົາໄດ້ຄັດເລືອກຄວາມສົກກະປົກ ແລະ ຄວາມກະບົດເປັນ “ວັດຖຸດິບ”; ຖ້າບໍ່ດັ່ງນັ້ນ, ເຮົາກໍຈະບໍ່ເປີດເຜີຍການກະທຳຂອງເຮົາໃຫ້ພວກໂຕໜອນເຫຼົ່ານີ້ເຫັນແນ່ນອນ. ເຮົາເຮັດພາລະກິດໃນຕົວພວກເຈົ້າດ້ວຍຄວາມບໍ່ເຕັມໃຈ, ບໍ່ມີຄວາມພ້ອມ ແລະ ຄວາມເຕັມໃຈຄືດັ່ງທີ່ເຮົາມີໃນຕອນທີ່ເຮົາປະຕິບັດພາລະກິດຂອງເຮົາໃນອິດສະຣາເອນ. ເຮົາກຳລັງອົດກັບຄວາມໂມໂຫຂອງເຮົາ ໃນຂະນະທີ່ບັງຄັບຕົວເຮົາເອງເພື່ອເວົ້າໃນທ່າມກາງພວກເຈົ້າ. ຖ້າບໍ່ແມ່ນເພື່ອພາລະກິດອັນຍິ່ງໃຫຍ່ຂອງເຮົາ ແລ້ວເຮົາຈະອົດທົນສືບຕໍ່ເບິ່ງພວກໂຕໜອນດັ່ງກ່າວໄດ້ແນວໃດ? ຖ້າບໍ່ແມ່ນເພື່ອປະໂຫຍດຂອງຊື່ຂອງເຮົາ ແລ້ວເຮົາຈະບໍ່ໄດ້ສະເດັດຂຶ້ນໄປຈຸດສູງສຸດອີກຕໍ່ໄປ ແລະ ເຜົາສົບໂຕໜອນເຫຼົ່ານີ້ໄປພ້ອມກັບກອງຂີ້ສັດຂອງພວກເຂົາຈົນໝົດ! ຖ້າບໍ່ແມ່ນເພື່ອປະໂຫຍດຂອງລັດສະໝີຂອງເຮົາ ແລ້ວເຮົາຈະອະນຸຍາດໃຫ້ພວກຜີສາດຮ້າຍເຫຼົ່ານີ້ຕໍ່ຕ້ານເຮົາຢ່າງເປີດເຜີຍພ້ອມກັບແກວ່ງຫົວຂອງພວກເຂົາຢູ່ຕໍ່ໜ້າເຮົາບໍ? ຖ້າບໍ່ແມ່ນເພື່ອເຮັດໃຫ້ພາລະກິດຂອງເຮົາດຳເນີນໄປໄດ້ດີ ໂດຍທີ່ບໍ່ມີສິ່ງກີດຂວາງແມ່ນແຕ່ໜ້ອຍດຽວ ແລ້ວເຮົາຈະອະນຸຍາດໃຫ້ຄົນເຫຼົ່ານີ້ທີ່ເປັນຄືກັບໂຕໜອນມາຂົ່ມເຫັງເຮົາຢ່າງປ່າເຖື່ອນບໍ? ຖ້າຜູ້ຄົນຫຼາຍຮ້ອຍຄົນໃນໝູ່ບ້ານໃນອິດສະຣາເອນລຸກຮືຂຶ້ນເພື່ອຕໍ່ຕ້ານເຮົາຄືແບບນີ້, ເຖິງວ່າພວກເຂົາຈະເຮັດການບູຊາຕໍ່ເຮົາ ເຮົາກໍຈະທຳລາຍພວກເຂົາພາຍໃຕ້ແຜ່ນດິນແຕກໃນພື້ນດິນ ເພື່ອປ້ອງກັນບໍ່ໃຫ້ຜູ້ຄົນທີ່ຢູ່ເມືອງອື່ນໆເຮັດການກະບົດຕໍ່ເຮົາໄດ້ອີກ. ເຮົາແມ່ນໄຟທີ່ເຜົາໄໝ້ ແລະ ເຮົາບໍ່ອົດກັ້ນຕໍ່ການກະທຳຜິດ. ເພາະວ່າມະນຸດທຸກຄົນຖືກເຮົາສ້າງຂຶ້ນມາ, ພວກເຂົາກໍຕ້ອງເຊື່ອຟັງຕໍ່ສິ່ງທີ່ເຮົາເວົ້າ ແລະ ເຮັດ ແລະ ບໍ່ສາມາດເຮັດການກະບົດໄດ້. ຜູ້ຄົນບໍ່ມີສິດເຂົ້າມາຫຍຸ້ງກ່ຽວໃນພາລະກິດຂອງເຮົາ ແລ້ວແຮງໄກທີ່ພວກເຂົາຈະມີຄຸນສົມບັດວິເຄາະສິ່ງທີ່ຖືກ ຫຼື ຜິດໃນພາລະກິດ ແລະ ພຣະທຳຂອງເຮົາ. ເຮົາແມ່ນພຣະຜູ້ເປັນເຈົ້າແຫ່ງການຊົງສ້າງ ແລະ ສິ່ງທີ່ຖືກຊົງສ້າງຄວນບັນລຸທຸກສິ່ງທີ່ເຮົາຕ້ອງການດ້ວຍຫົວໃຈທີ່ເຄົາລົບບູຊາເຮົາ; ພວກເຂົາບໍ່ຄວນພະຍາຍາມໃຊ້ເຫດຜົນກັບເຮົາ ແລະ ພິເສດ ພວກເຂົາບໍ່ຄວນຕໍ່ຕ້ານເຮົາ. ເຮົາຄຸ້ມຄອງຜູ້ຄົນຂອງເຮົາດ້ວຍອຳນາດຂອງເຮົາ ແລະ ທຸກຄົນທີ່ເປັນສ່ວນໃນການຊົງສ້າງຂອງເຮົາຄວນຍອມຢູ່ພາຍໃຕ້ອຳນາດຂອງເຮົາ. ເຖິງວ່າໃນປັດຈຸບັນ ພວກເຈົ້າຈະກ້າຫານ ແລະ ອວດດີຢູ່ຕໍ່ໜ້າເຮົາ, ເຖິງພວກເຈົ້າຈະບໍ່ເຊື່ອຟັງພຣະທຳທີ່ເຮົາສັ່ງສອນພວກເຈົ້າ ແລະ ບໍ່ຮູ້ຈັກຢຳເກງ, ເຮົາພຽງໄດ້ແຕ່ທົນກັບຄວາມກະບົດຂອງພວກເຈົ້າ; ເຮົາຈະບໍ່ຍອມເສຍອາລົມຂອງເຮົາ ແລະ ເຮັດໃຫ້ມີຜົນກະທົບຕໍ່ພາລະກິດຂອງເຮົາ ຍ້ອນໂຕໜອນນ້ອຍໆທີ່ບໍ່ມີຄວາມໝາຍຫຍັງໄດ້ພິກດິນໃນກອງຂີ້ສັດຂຶ້ນມາ. ເຮົາອົດທົນກັບການມີຢູ່ຢ່າງຕໍ່ເນື່ອງຂອງທຸກສິ່ງທີ່ເຮົາລັງກຽດ ແລະ ທຸກສິ່ງທີ່ເຮົາກຽດຊັງ

ຍ້ອນຜົນປະໂຫຍດແກ່ຄວາມປະສົງຂອງພຣະບິດາຂອງເຮົາ ຈົນກວ່າພຣະຄຳຂອງເຮົາຈະສົມບູນ ແລະ ຈົນເຖິງວາລະສຸດທ້າຍຂອງເຮົາ. ຈົ່ງຢ່າກັງວົນ! ເຮົາບໍ່ສາມາດຈົມລົງໄປຢູ່ໃນລະດັບດຽວກັນກັບໂຕໜອນທີ່ບໍ່ມີຊື່ ແລະ ເຮົາຈະບໍ່ປຽບທຽບລະດັບທັກສະຂອງເຮົາກັບເຈົ້າ. ເຮົາລັງກຽດເຈົ້າ ແຕ່ເຮົາກໍສາມາດອົດທົນໄດ້. ເຈົ້າບໍ່ເຊື່ອຟັງເຮົາ ແຕ່ເຈົ້າບໍ່ສາມາດໜີພົ້ນຈາກມື້ທີ່ເຮົາຈະຕີສອນເຈົ້າ ເຊິ່ງພຣະບິດາຂອງເຮົາໄດ້ສັນຍາກັບເຮົາໄວ້ແລ້ວ. ໂຕໜອນທີ່ຖືກສ້າງຂຶ້ນສາມາດປຽບທຽບກັບພຣະຜູ້ເປັນເຈົ້າແຫ່ງການຊົງສ້າງໄດ້ບໍ? ໃນລະດູໃບໄມ້ຫຼົ່ນ, ໃບໄມ້ທີ່ຫຼົ່ນຈະກັບຄືນໄປສູ່ຮາກເຫງົ້າຂອງມັນ; ເຈົ້າຈະກັບຄືນເມືອເຮືອນຊານຂອງ "ບິດາ" ຂອງເຈົ້າ ແລະ ເຮົາຈະກັບຄືນໄປຢູ່ຄຽງຂ້າງພຣະບິດາຂອງເຮົາ. ຄວາມຮັກທີ່ອ່ອນໂຍນຂອງພຣະອົງຈະຕິດຕາມເຮົາ ແລະ ການຢຽບຢໍ່າຂອງບິດາຂອງເຈົ້າຈະຕິດຕາມເຈົ້າ. ເຮົາຈະມີລັດສະໝີຂອງພຣະບິດາຂອງເຮົາ ແລະ ເຈົ້າຈະມີຄວາມອັບອາຍຂອງບິດາຂອງເຈົ້າ. ເຮົາຈະໃຊ້ການຕີສອນທີ່ເຮົາໄດ້ເກັບໄວ້ເປັນເວລາດົນນານເພື່ອໃຫ້ຕິດຕາມເຈົ້າ ແລະ ເຈົ້າຈະພົບກັບການຕີສອນຂອງເຮົາດ້ວຍເນື້ອໜັງທີ່ເນົ່າບູດຂອງເຈົ້າ ທີ່ເສື່ອມຊາມເປັນເວລາຫຼາຍສິບພັນປີ. ເຮົາຈະຕ້ອງໄດ້ສະຫຼຸບພາລະກິດແຫ່ງພຣະທຳຂອງເຮົາໃນຕົວເຈົ້າ ພ້ອມກັບການອົດກັ້ນ ແລະ ເຈົ້າຈະເລີ່ມເຮັດບົດບາດໃນການທົນທຸກຕໍ່ຄວາມພິນາດຈາກພຣະທຳຂອງເຮົາ. ເຮົາຈະຍິນດີເປັນຢ່າງຍິ່ງ ແລະ ຈະປະຕິບັດພາລະກິດໃນອິດສະຣາເອນ; ເຈົ້າຈະຮ້ອງໄຫ້ ແລະ ກັດແຂ້ວຕົວເອງ, ດຳລົງຢູ່ ແລະ ຕາຍໄປໃນຂີ້ຕົມ. ເຮົາຈະໄດ້ຮັບຮູບຮ່າງແທ້ຂອງເຮົາກັບຄືນມາ ແລະ ບໍ່ໄດ້ຢູ່ໃນຄວາມສົກກະປົກກັບພວກເຈົ້າອີກຕໍ່ໄປ ໃນຂະນະທີ່ພວກເຈົ້າຈະໄດ້ຮັບຄວາມຂີ້ຮ້າຍທີ່ແທ້ຈິງຂອງພວກເຈົ້າກັບຄືນໄປ ແລະ ສືບຕໍ່ດຸດໄປມາຢູ່ໃນກອງຂີ້ສັດ. ເມື່ອພາລະກິດ ແລະ ພຣະທຳຂອງເຮົາຖືກເຮັດສຳເລັດ, ມັນກໍຈະເປັນມື້ແຫ່ງຄວາມສຸກສຳລັບເຮົາ. ເມື່ອການຕໍ່ຕ້ານ ແລະ ການກະບົດຂອງເຈົ້າຖືກເຮັດສຳເລັດ, ມັນກໍຈະເປັນມື້ແຫ່ງການຮ້ອງໄຫ້ສຳລັບເຈົ້າ. ເຮົາຈະບໍ່ເຫັນໃຈເຈົ້າ ແລະ ເຈົ້າຈະບໍ່ເຫັນເຮົາອີກ. ເຮົາຈະບໍ່ສົນທະນາກັບເຈົ້າອີກຕໍ່ໄປ ແລະ ເຈົ້າຈະບໍ່ພະເຊີນກັບເຮົາອີກ. ເຮົາຈະກຽດຊັງການກະບົດຂອງເຈົ້າ ແລະ ເຈົ້າຈະຄິດຮອດຄວາມໜ້າຮັກຂອງເຮົາ. ເຮົາຈະຕີເຈົ້າ ແລະ ເຈົ້າຈະຄິດຮອດເຮົາ. ເຮົາຈະໜີອອກຈາກເຈົ້າດ້ວຍຄວາມຍິນດີ ແລະ ເຈົ້າຈະຮັບຮູ້ເຖິງໜີ້ບຸນຄຸນທີ່ເຈົ້າມີຕໍ່ເຮົາ. ເຮົາຈະບໍ່ເຫັນເຈົ້າອີກຕໍ່ໄປ ແຕ່ເຈົ້າຈະຫວັງຫາເຮົາສະເໝີ. ເຮົາຈະກຽດຊັງເຈົ້າ ເພາະວ່າ ໃນປັດຈຸບັນເຈົ້າຕໍ່ຕ້ານເຮົາ ແລະ ເຈົ້າຈະຄິດຮອດເຮົາ ເພາະວ່າ ໃນປັດຈຸບັນເຮົາຕີສອນເຈົ້າ. ເຮົາຈະບໍ່ເຕັມໃຈທີ່ຈະອາໄສຢູ່ຄຽງຂ້າງເຈົ້າ ແຕ່ເຈົ້າຈະໂຫຍຫາຢ່າງຂົມຂື່ນ ແລະ ຫ້ອງໄຮ້ຕະຫຼອດການ ເພາະເຈົ້າຈະເສຍໃຈກັບທຸກສິ່ງທີ່ເຈົ້າໄດ້ເຮັດຕໍ່ເຮົາ. ເຈົ້າຈະຮູ້ສຶກສຳນຶກຜິດຕໍ່ການກະບົດ ແລະ ການຕໍ່ຕ້ານຂອງເຈົ້າ, ເຈົ້າຈະໝອບລົງກັບພື້ນພ້ອມກັບຄວາມເສຍໃຈ ແລະ ລົ້ມລົງຢູ່ຕໍ່ໜ້າເຮົາ ແລະ ສາບານທີ່ຈະເລີກບໍ່ເຊື່ອຟັງເຮົາອີກຕໍ່ໄປ. ຢ່າງໃດກໍຕາມ, ໃນໃຈຂອງເຈົ້າ ເຈົ້າຈະຮັກພຽງແຕ່ເຮົາ ແຕ່ເຈົ້າຈະບໍ່ສາມາດໄດ້ຍິນສຽງຂອງເຮົາອີກຕໍ່ໄປ. ເຮົາຈະເຮັດໃຫ້ເຈົ້າລະອາຍໃຈກັບຕົວເອງ.

ຕອນນີ້ເຮົາກຳລັງເບິ່ງເນື້ອໜັງທີ່ໜົກມຸ້ນຂອງເຈົ້າ ເຊິ່ງຈະຫຼອກລວງເຮົາ ແລະ ເຮົາກໍມີຄຳເຕືອນໜ້ອຍໜຶ່ງໃຫ້ກັບເຈົ້າ ເຖິງວ່າເຮົາຈະບໍ່ໃຊ້ການຕີສອນເພື່ອ "ຮັບໃຊ້" ເຈົ້າ. ເຈົ້າກໍຄວນຮູ້ບົດບາດທີ່ເຈົ້າ

ມີໃນພາລະກິດຂອງເຮົາ ແລະ ຫຼັງຈາກນັ້ນ ເຮົາຈຶ່ງຈະພໍໃຈ. ນອກເໜືອຈາກເລື່ອງນີ້, ຖ້າເຈົ້າຕໍ່ຕ້ານເຮົາ ຫຼື ໃຊ້ເງິນຂອງເຮົາ ຫຼື ກິນຂອງບູຊາທີ່ມີໄວ້ສຳລັບເຮົາ ນັ້ນກໍຄືພຣະເຢໂຮວາ ຫຼື ຖ້າໂຕໜອນແບບພວກເຈົ້າຈະກັດກັນເອງ ຫຼື ຖ້າສັບພະສິ່ງທີ່ຄ້າຍຄືໝາຈະມີຂໍ້ຂັດແຍ້ງ ຫຼື ເຮັດຜິດຕໍ່ກັນເອງ, ເຮົາກໍຈະບໍ່ສົນໃຈກັບສິ່ງນັ້ນເລີຍ. ພວກເຈົ້າພຽງແຕ່ຈຳເປັນຕ້ອງຮູ້ວ່າ ພວກເຈົ້າແມ່ນສິ່ງຫຍັງ ແລະ ເຮົາກໍຈະພໍໃຈແລ້ວ. ນອກຈາກທັງໝົດນີ້ແລ້ວ, ມັນກໍບໍ່ເປັນຫຍັງ ຖ້າເຈົ້າຢາກຈະຊັກອາວຸດໃສ່ກັນ ຫຼື ຕໍ່ສູ້ກັນເອງດ້ວຍຄຳເວົ້າ; ເຮົາບໍ່ມີຄວາມປາຖະໜາທີ່ຈະໄປຫຍຸ້ງກ່ຽວໃນສິ່ງດັ່ງກ່າວ ແລະ ເຮົາບໍ່ໄດ້ກ່ຽວຂ້ອງກັບເລື່ອງຂອງມະນຸດແມ່ນແຕ່ໜ້ອຍດຽວ. ມັນບໍ່ແມ່ນວ່າ ເຮົາບໍ່ສົນໃຈກ່ຽວກັບຂໍ້ຂັດແຍ້ງລະຫວ່າງພວກເຈົ້າ; ມັນຍ້ອນວ່າ ເຮົາບໍ່ແມ່ນໜຶ່ງໃນບັນດາພວກເຈົ້າ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ໄດ້ເຂົ້າຮ່ວມໃນເລື່ອງຕ່າງໆທີ່ເກີດຂຶ້ນລະຫວ່າງພວກເຈົ້າ. ເຮົາເອງບໍ່ແມ່ນສິ່ງມີຊີວິດທີ່ຖືກສ້າງຂຶ້ນ ແລະ ບໍ່ແມ່ນສິ່ງຂອງໂລກ ເຊິ່ງດ້ວຍເຫດນັ້ນ ເຮົາຈຶ່ງລັງກຽດຊີວິດທີ່ວຸ້ນວາຍຂອງຜູ້ຄົນ ແລະ ຄວາມສຳພັນທີ່ບໍ່ເປັນລະບຽບ ແລະ ບໍ່ຖືກຕ້ອງລະຫວ່າງພວກເຂົາ. ໂດຍສະເພາະແມ່ນເຮົາລັງກຽດກຸ່ມຄົນທີ່ຝົດນັນ. ຢ່າງໃດກໍຕາມ, ເຮົາມີຄວາມຮູ້ທີ່ເລິກເຊິ່ງກ່ຽວກັບຄວາມບໍ່ບໍລິສຸດໃນຈິດໃຈຂອງສິ່ງທີ່ຖືກຊົງສ້າງແຕ່ລະຄົນ ແລະ ກ່ອນທີ່ເຮົາໄດ້ສ້າງພວກເຈົ້າ ເຮົາແມ່ນຮູ້ເຖິງຄວາມບໍ່ຊອບທຳທີ່ຝັງເລິກຢູ່ໃນໃຈມະນຸດມາກ່ອນແລ້ວ ແລະ ເຮົາກໍຮູ້ເຖິງຄວາມຫຼອກລວງ ແລະ ຄວາມຄົດງໍໃນໃຈຂອງມະນຸດ. ດັ່ງນັ້ນ, ເຖິງວ່າຈະບໍ່ມີຮ່ອງຮອຍເລີຍໃນເວລາທີ່ຜູ້ຄົນເຮັດໃນສິ່ງທີ່ບໍ່ຊອບທຳ, ເຮົາກໍຍັງຮູ້ວ່າ ຄວາມບໍ່ຊອບທຳທີ່ຢູ່ພາຍໃນໃຈຂອງພວກເຈົ້າແມ່ນມີຫຼາຍກວ່າຄວາມອຸດົມສົມບູນຂອງທຸກສິ່ງທຸກຢ່າງທີ່ເຮົາໄດ້ຊົງສ້າງ. ພວກເຈົ້າທຸກຄົນໄດ້ຂຶ້ນໄປສູ່ຈຸດສູງສຸດຂອງຝູງຊົນ; ພວກເຈົ້າໄດ້ຂຶ້ນໄປເປັນບັນພະບຸລຸດຂອງມວນຊົນ. ພວກເຈົ້າເຮັດຕາມອຳເພີໃຈທີ່ສຸດ ແລະ ພວກເຈົ້າແລ່ນອາລະວາດໃນທ່າມກາງໂຕໜອນໂດຍຊອກຫາບ່ອນທີ່ຈະຜ່ອນຄາຍ ແລະ ພະຍາຍາມກິນໜອນທີ່ນ້ອຍກວ່າພວກເຈົ້າ. ໃນຈິດໃຈຂອງພວກເຈົ້າ ພວກເຈົ້າແມ່ນມີເຈດຕະນາຮ້າຍ ແລະ ເປັນຕາຢ້ານຫຼາຍກວ່າຜີສາດ ທີ່ໄດ້ຈົມລົງໄປກົ້ນທະເລ. ພວກເຈົ້າຢູ່ໃນພື້ນຂອງກອງຂີ້ສັດ, ລົບກວນໂຕໜອນອື່ນໆແຕ່ທາງເທິງຈົນຮອດລຸ່ມຈົນກວ່າພວກມັນບໍ່ມີຄວາມສະຫງົບ, ຕໍ່ສູ້ກັນເອງໄລຍະໜຶ່ງ ແລະ ຫຼັງຈາກນັ້ນກໍໃຈເຢັນລົງ. ພວກເຈົ້າບໍ່ຮູ້ຈັກບ່ອນຂອງຕົວເອງ ແຕ່ພວກເຈົ້າກໍຍັງຕໍ່ສູ້ກັນເອງໃນກອງຂີ້ສັດ. ພວກເຈົ້າຈະໄດ້ຫຍັງຈາກການດີ້ນລົນດັ່ງກ່າວ? ຖ້າໃນໃຈຂອງພວກເຈົ້າ ພວກເຈົ້າມີຄວາມເຄົາລົບຕໍ່ເຮົາຢ່າງແທ້ຈິງ ແລ້ວພວກເຈົ້າຈະສາມາດຕໍ່ສູ້ກັນເອງຫຼັບຫຼັງເຮົາໄດ້ແນວໃດ? ເຖິງວ່າສະຖານະຂອງເຈົ້າຈະສູງສົ່ງພຽງໃດກໍຕາມ ແຕ່ເຈົ້າກໍຍັງແມ່ນໂຕໜອນທີ່ເໝັນເນົ່າໃນກອງຂີ້ສັດບໍ່ແມ່ນບໍ? ເຈົ້າຈະສາມາດມີປີກ ແລະ ກາຍເປັນນົກເຂົາໃນທ້ອງຟ້າໄດ້ແນວໃດ? ພວກເຈົ້າແມ່ນໂຕໜອນນ້ອຍໆທີ່ເໝັນທີ່ລັກເຄື່ອງຖວາຍຈາກແທ່ນບູຊາຂອງເຮົາ ນັ້ນກໍຄືພຣະເຢໂຮວາ; ໃນການເຮັດແບບນັ້ນ, ເຈົ້າສາມາດຊ່ວຍຊື່ສຽງທີ່ເສຍຫາຍ ແລະ ລົ້ມເຫຼວ ແລະ ກາຍເປັນຜູ້ຄົນຂອງອິດສະຣາເອນທີ່ຖືກເລືອກໄດ້ບໍ? ເຈົ້າແມ່ນຄົນຊົ່ວທີ່ບໍ່ມີຢາງອາຍ! ເຄື່ອງບູຊາຢູ່ແທ່ນບູຊາແມ່ນຖືກຖວາຍແກ່ເຮົາໂດຍຜູ້ຄົນ ເພື່ອເປັນການສະແດງອອກເຖິງຄວາມຮູ້ສຶກເມດຕາກະລຸນາຈາກຄົນທີ່ເຄົາລົບບູຊາເຮົາ. ພວກມັນແມ່ນເພື່ອການຄວບຄຸມ ແລະ

ການນຳໃຊ້ຂອງເຮົາ, ສະນັ້ນ ເຈົ້າຈະສາມາດປຸ້ນເອົານົກເຂົາຈາກເຮົາ ເຊິ່ງຜູ້ຄົນໄດ້ມອບໃຫ້ແກ່ເຮົາໄດ້ແນວໃດ? ເຈົ້າບໍ່ຢ້ານກາຍເປັນຄົນຢູດາບໍ? ເຈົ້າບໍ່ຢ້ານວ່າ ດິນແດນຂອງເຈົ້າອາດຈະກາຍເປັນສະໜາມທີ່ເຕັມໄປດ້ວຍເລືອດບໍ? ເຈົ້າແມ່ນສິ່ງທີ່ບໍ່ມີຢາງອາຍ! ເຈົ້າຄິດວ່າ ນົກເຂົາທີ່ຜູ້ຄົນຖວາຍແມ່ນເພື່ອຫຼໍ່ລ້ຽງທ້ອງໃສ້ຂອງໂຕໜອນແບບເຈົ້າບໍ? ສິ່ງທີ່ເຮົາໄດ້ເອົາໃຫ້ເຈົ້າແມ່ນສິ່ງທີ່ເຮົາພໍໃຈ ແລະ ເຕັມໃຈເອົາໃຫ້ເຈົ້າ; ສິ່ງທີ່ເຮົາບໍ່ໄດ້ໃຫ້ເຈົ້າແມ່ນສິ່ງທີ່ເຮົາສາມາດໃຊ້ໄດ້. ເຈົ້າບໍ່ສາມາດລັກເຄື່ອງຖວາຍຂອງເຮົາໄດ້ຢ່າງງ່າຍດາຍ. ຜູ້ທີ່ປະຕິບັດພາລະກິດແມ່ນເຮົາ, ພຣະເຢໂຮວາ ເຊິ່ງກໍຄືພຣະຜູ້ສ້າງ ແລະ ຜູ້ຄົນພາກັນຖວາຍເຄື່ອງບູຊາກໍຍ້ອນເຮົາ. ເຈົ້າຄິດວ່າ ມັນເປັນຄ່າຕອບແທນສຳລັບການແລ່ນໄປມາທີ່ເຈົ້າເຮັດບໍ? ເຈົ້າຈັ່ງແມ່ນບໍ່ມີຢາງອາຍແທ້ໆ! ເຈົ້າແລ່ນໄປມາເພື່ອຫຍັງ? ມັນບໍ່ແມ່ນເພື່ອຕົວເຈົ້າເອງບໍ? ເປັນຫຍັງເຈົ້າຈຶ່ງລັກເຄື່ອງບູຊາຂອງເຮົາ? ເປັນຫຍັງເຈົ້າຈຶ່ງລັກເງິນຈາກຖົງເງິນຂອງເຮົາ? ເຈົ້າບໍ່ແມ່ນລູກຊາຍຂອງ ຢູດາ ອິສະກາຣິອົດ ບໍ? ເຄື່ອງບູຊາທີ່ມີໃຫ້ເຮົາ ກໍຄືພຣະເຢໂຮວາ ແມ່ນເປັນເຄື່ອງບູຊາເພື່ອໃຫ້ພວກປະໂລຫິດໄດ້ຊື່ນຊົມ. ເຈົ້າແມ່ນພວກປະໂລຫິດບໍ? ເຈົ້າກ້າກິນເຄື່ອງຖວາຍຂອງເຮົາດ້ວຍຄວາມສະບາຍໃຈ ແລະ ເຖິງກັບວາງພວກມັນຢູ່ເທິງໂຕະ; ເຈົ້າບໍ່ມີຄ່າຫຍັງເລີຍ! ຄົນຊົ່ວທີ່ບໍ່ມີຄ່າເອີຍ! ໄຟຂອງເຮົາ ກໍຄືພຣະເຢໂຮວາ ຈະເຜົາເຈົ້າຈົນເປັນຂີ້ເຖົ່າ!

# ບໍ່ມີໃຜທີ່ເກີດຈາກເນື້ອໜັງ ສາມາດລອດພົ້ນຈາກມື້ແຫ່ງຄວາມໂກດຮ້າຍ

ເຮົາໄດ້ຕັກເຕືອນພວກເຈົ້າໂດຍເຫັນແກ່ຜົນປະໂຫຍດຂອງການເອົາຕົວລອດຂອງພວກເຈົ້າເອງ ເພື່ອໃຫ້ພາລະກິດຂອງເຮົາດຳເນີນໄປຢ່າງນີ້ມນວນ ແລະ ເພື່ອໃຫ້ພາລະກິດທີ່ເລີ່ມຕົ້ນຂອງເຮົາທົ່ວທັງຈັກກະວານດຳເນີນໄປຢ່າງເໝາະສົມ ແລະ ສົມບູນ ໂດຍເປີດເຜີຍພຣະທຳ, ອຳນາດ, ສະຫງ່າລາສີ ແລະ ການພິພາກສາຂອງເຮົາທີ່ມີໃຫ້ກັບປະຊາຊົນໃນທຸກປະເທດ ແລະ ຊົນຊາດ. ພາລະກິດທີ່ເຮົາດຳເນີນທ່າມກາງພວກເຈົ້າແມ່ນການເລີ່ມຕົ້ນຂອງພາລະກິດຂອງເຮົາທົ່ວທັງຈັກກະວານ. ເຖິງແມ່ນວ່າປັດຈຸບັນນີ້ຄືເວລາແຫ່ງຍຸກສຸດທ້າຍ ຈົ່ງຮູ້ໄວ້ວ່າ “ຍຸກສຸດທ້າຍ” ເປັນພຽງຊື່ຂອງຍຸກໜຶ່ງ; ຄືກັນກັບຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນ, ມັນໝາຍເຖິງຍຸກ ແລະ ມັນກ່າວເຖິງຍຸກທັງໝົດ ແທນທີ່ຈະແມ່ນສອງສາມປີ ຫຼື ສອງສາມເດືອນສຸດທ້າຍ. ເຖິງຢ່າງນັ້ນກໍຕາມ ຍຸກສຸດທ້າຍບໍ່ຄືກັບຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງພຣະບັນຍັດ. ພາລະກິດຂອງຍຸກສຸດທ້າຍບໍ່ໄດ້ດຳເນີນໃນອິດສະຣາເອນ ແຕ່ທ່າມກາງຕ່າງຊາດ; ມັນເປັນການເອົາໄຊຊະນະຕໍ່ໜ້າບັນລັງແຫ່ງປະຊາຊົນຂອງເຮົາຈາກທຸກຊົນຊາດ ແລະ ຊົນເຜົ່າທີ່ຢູ່ນອກອິດສະຣາເອນ ເພື່ອວ່າສະຫງ່າລາສຂອງເຮົາທົ່ວທັງຈັກກະວານຈະສາມາດເຕັມໄປທົ່ວອາວະກາດ ແລະ ທ້ອງຟ້າ. ມັນເປັນດັ່ງນັ້ນກໍເພື່ອວ່າ ເຮົາຈະສາມາດໄດ້ຮັບລັດສະໝີທີ່ຍິ່ງໃຫຍ່ກວ່າເກົ່າ ເພື່ອທຸກສິ່ງທີ່ມີຊີວິດເທິງແຜ່ນດິນໂລກຈະສາມາດສົ່ງຕໍ່ລັດສະໝີຂອງເຮົາໄປທຸກໆຊົນຊາດ, ຈາກຮຸ່ນສູ່ຮຸ່ນຕະລອດໄປ ແລະ ທຸກສິ່ງທີ່ມີຊີວິດໃນສະຫວັນ ແລະ ເທິງແຜ່ນດິນໂລກຈະສາມາດເຫັນລັດສະໝີທັງໝົດທີ່ເຮົາໄດ້ຮັບຢູ່ເທິງແຜ່ນດິນໂລກນີ້. ພາລະກິດທີ່ດຳເນີນໃນລະຫວ່າງຍຸກສຸດທ້າຍນີ້ ເປັນພາລະກິດແຫ່ງເອົາໄຊຊະນະ. ມັນບໍ່ແມ່ນການນຳພາຊີວິດຂອງທຸກຄົນເທິງແຜ່ນດິນໂລກ ແຕ່ເປັນການສິ້ນສຸດຄວາມເປັນອຳມະຕະຂອງມະນຸດຊາດ ແລະ ຊີວິດທີ່ຍາວນານເປັນເວລາພັນປີຂອງຄວາມອົດທົນຢູ່ເທິງແຜ່ນດິນໂລກ. ຜົນຕາມມາກໍຄື ພາລະກິດຂອງຍຸກສຸດທ້າຍບໍ່ສາມາດເປັນຄືກັບຊ່ວງເວລາສອງສາມພັນປີຂອງພາລະກິດທີ່ເກີດຂຶ້ນໃນອິດສະຣາເອນ ຫຼື ມັນບໍ່ສາມາດເປັນຄືກັບຊ່ວງເວລາພຽງສອງສາມພັນປີຂອງພາລະກິດທີ່ເກີດຂຶ້ນໃນຢູດາ ທີ່ສືບຕໍ່ເປັນເວລາສອງພັນປີຈົນຮອດການມາເກີດໃໝ່ຂອງພຣະເຈົ້າຄັ້ງທີສອງ. ຜູ້ຄົນໃນຍຸກສຸດທ້າຍພະເຊີນພຽງແຕ່ການປາກົດຕົວອີກຄັ້ງຂອງພຣະຜູ້ໄຖ່ໃນຮ່າງກາຍຂອງມະນຸດ ແລະ ພວກເຂົາຮັບພາລະກິດສ່ວນຕົວ ແລະ ພຣະທຳຂອງພຣະເຈົ້າ. ມັນຈະບໍ່ແມ່ນສອງພັນປີ ກ່ອນທີ່ຍຸກສຸດທ້າຍຈະສິ້ນສຸດລົງ; ຍຸກສຸດທ້າຍດັ່ງກ່າວຈະຜ່ານໄປໄວ ຄືກັບເວລາທີ່ພຣະເຢຊູດຳເນີນພາລະກິດຂອງຍຸກແຫ່ງພຣະຄຸນໃນຢູດາ. ນີ້ກໍເພາະວ່າ ຍຸກສຸດທ້າຍເປັນການສິ້ນສຸດຂອງຍຸກທັງໝົດ. ເປັນຍຸກໃນການສຳເລັດ ແລະ ການສິ້ນສຸດຂອງແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າ ແລະ ເປັນຍຸກສິ້ນສຸດການເດີນທາງແຫ່ງຄວາມທົນທຸກທໍລະມານໃນຊີວິດຂອງມະນຸດ. ຍຸກສຸດທ້າຍບໍ່ໄດ້ນຳມະນຸດທັງໝົດເຂົ້າສູ່ຍຸກໃໝ່ ຫຼື ອະນຸຍາດໃຫ້ມະນຸດສືບຕໍ່ດຳລົງຊີວິດ; ສິ່ງນັ້ນຈະບໍ່ມີຄວາມສຳຄັນສຳລັບແຜນການຄຸ້ມຄອງຂອງເຮົາ ຫຼື

ການດຳລົງຢູ່ຂອງມະນຸດ. ຖ້າມະນຸດຊາດສືບຕໍ່ເປັນແບບນີ້ ແລ້ວອີກບໍ່ດົນ ພວກເຂົາຈະຖືກກືນກິນໂດຍພະຍາມານ ແລະ ວິນຍານເຫຼົ່ານັ້ນທີ່ເປັນຂອງເຮົາ ໃນທີ່ສຸດ ກໍຈະຖືກທຳລາຍໂດຍມືຂອງມັນ. ພາລະກິດຂອງເຮົາຄົງຢູ່ເປັນເວລາຫົກພັນປີ ແລະ ເຮົາສັນຍາວ່າ ການຄວບຄຸມມະນຸດທັງໝົດຂອງຜີຮ້າຍກໍ່ຈະບໍ່ດົນໄປກວ່າຫົກພັນປີ. ແລ້ວດ້ວຍເຫດນັ້ນ ເວລາແມ່ນໝົດແລ້ວ. ເຮົາຈະບໍ່ສືບຕໍ່ ຫຼື ຊັກຊ້າອີກຕໍ່ໄປ, ລະຫວ່າງຍຸກສຸດທ້າຍ ເຮົາຈະຕີພ່າຍແພ້ຊາຕານ, ເຮົາຈະເອົາລັດສະໝີທັງໝົດຂອງເຮົາຄືນ ແລະ ເຮົາຈະຮຽກວິນຍານທັງໝົດທີ່ເປັນຂອງເຮົາເທິງແຜ່ນດິນໂລກກັບມາ ເພື່ອວິນຍານທີ່ທົນທຸກທໍລະມານເຫຼົ່ານີ້ຈະລອດພົ້ນຈາກທະເລແຫ່ງຄວາມທົນທຸກທໍລະມານ ແລະ ດ້ວຍເຫດນັ້ນ ຈະສິ້ນສຸດພາລະກິດທັງໝົດຂອງເຮົາເທິງແຜ່ນດິນໂລກ. ນັບຈາກມື້ນີ້ເປັນຕົ້ນໄປ ເຮົາຈະບໍ່ມາເປັນມະນຸດເທິງແຜ່ນດິນໂລກອີກ ແລະ ພາລະກິດທັງໝົດທີ່ຄວບຄຸມໂດຍພຣະວິນຍານຂອງເຮົາກໍຈະບໍ່ເກີດຂຶ້ນເທິງແຜ່ນດິນໂລກອີກຕໍ່ໄປ. ແຕ່, ເຮົາຈະເຮັດອີກສິ່ງໜຶ່ງເທິງແຜ່ນດິນໂລກ: ເຮົາຈະສ້າງ ມະນຸດຊາດຂຶ້ນມາໃໝ່ ເຊິ່ງເປັນມະນຸດຊາດທີ່ບໍລິສຸດ ແລະ ເປັນເມືອງທີ່ສັດຊື່ຂອງເຮົາເທິງແຜ່ນດິນໂລກ. ແຕ່ຈົ່ງຮູ້ໄວ້ວ່າ ເຮົາຈະບໍ່ທຳລາຍໂລກທັງໝົດ ຫຼື ເຮົາຈະບໍ່ທຳລາຍມະນຸດຊາດທັງໝົດ. ເຮົາຈະຮັກສາໜຶ່ງສ່ວນສາມທີ່ຍັງເຫຼືອຢູ່, ໜຶ່ງສ່ວນສາມທີ່ຮັກເຮົາ ທີ່ເຮົາມີໄຊຊະນະຢ່າງແທ້ຈິງ ແລະ ເຮົາຈະເຮັດໃຫ້ໜຶ່ງສ່ວນສາມນີ້ເກີດຜົນ ແລະ ຂະຫຍາຍຢູ່ເທິງແຜ່ນດິນໂລກຄືກັບທີ່ຊາວອິດສະຣາເອນໄດ້ເຮັດພາຍໃຕ້ຂໍ້ບັນຍັດ, ລ້ຽງພວກເຂົາດ້ວຍແກະ ແລະ ງົວຈຳນວນຫຼວງຫຼາຍ ພ້ອມດ້ວຍຄວາມອຸດົມສົມບູນທັງໝົດຂອງແຜ່ນດິນໂລກ. ມະນຸດຊາດກຸ່ມນີ້ຈະຢູ່ກັບເຮົາຕະຫຼອດໄປ, ແຕ່ມັນບໍ່ແມ່ນມະນຸດຊາດສົກກະປົກທີ່ເປັນຕາເວດທະນາໃນປັດຈຸບັນ ແຕ່ແມ່ນມະນຸດຊາດທີ່ເປັນການຮວບຮວມຈາກຄົນເຫຼົ່ານັ້ນທຸກຄົນທີ່ຖືກຮັບໂດຍເຮົາ. ມະນຸດຊາດດັ່ງກ່າວຈະບໍ່ຖືກທຳລາຍ, ຣຸກຮານ ຫຼື ຄວບຄຸມໂດຍຊາຕານ ແລະ ຈະເປັນມະນຸດຊາດພຽງກຸ່ມດຽວທີ່ດຳລົງຊີວິດຢູ່ເທິງແຜ່ນດິນໂລກຫຼັງຈາກທີ່ເຮົາເອົາໄຊຊະນະຊາຕານ. ເປັນມະນຸດຊາດທີ່ເຮົາໄດ້ເອົາຊະນະໃນມື້ນີ້ ແລະ ຖືກຮັບໂດຍພຣະສັນຍາຂອງເຮົາ. ດ້ວຍເຫດນັ້ນມະນຸດຊາດທີ່ຖືກເອົາຊະນະໃນລະຫວ່າງຍຸກສຸດທ້າຍກໍແມ່ນມະນຸດຊາດທີ່ຈະຮັບການຍົກເວັ້ນ ແລະຈະໄດ້ຮັບພອນຕະຫຼອດໄປເປັນນິດຂອງເຮົາ. ມັນຈະເປັນພຽງຂໍ້ພິສູດດຽວແຫ່ງໄຊຊະນະຂອງເຮົາເໜືອຊາຕານ ແລະ ເປັນພຽງຊະເລີຍເສິກຂອງສົງຄາມລະຫວ່າງເຮົາກັບຊາຕານ. ເຮົາໄດ້ໄຖ່ຊະເລີຍເສິກສົງຄາມເຫຼົ່ານີ້ຈາກອຳນາດຂອງຊາຕານ ແລະ ເປັນພຽງການຫຼໍ່ຫຼອມແກ້ວຜະລຶກ ແລະ ໝາກຜົນດຽວຂອງແຜນການຄຸ້ມຄອງຫົກພັນປີຂອງເຮົາ. ພວກເຂົາມາຈາກທຸກຊົນຊາດ ແລະ ທຸກນິກາຍ, ທຸກຫົນແຫ່ງ ແລະ ທຸກປະເທດທົ່ວທັງຈັກກະວານ. ພວກເຂົາມາຈາກຊົນຊາດທີ່ແຕກຕ່າງກັນ, ມີພາສາ, ປະເພນີ ແລະ ສີຜິວທີ່ແຕກຕ່າງກັນ; ພວກເຂົາຂະຫຍາຍໄປທົ່ວທຸກເຊື້ອຊາດ ແລະ ສາສະໜາຕ່າງໆເທິງແຜ່ນດິນໂລກ ແລະ ແມ່ນແຕ່ທຸກໆມຸມຂອງແຜ່ນດິນໂລກ. ໃນທີ່ສຸດ ພວກເຂົາຈະລວມຕົວກັນເພື່ອສ້າງມະນຸດຊາດທີ່ສົມບູນແບບ ເຊິ່ງເປັນການຮວບຮວມຂອງມະນຸດທີ່ກຳລັງຂອງຊາຕານຈະບໍ່ສາມາດເຂົ້າເຖິງໄດ້. ຄົນເຫຼົ່ານັ້ນທີ່ຢູ່ທ່າມກາງມະນຸດຊາດເຊິ່ງບໍ່ໄດ້ຮັບຄວາມລອດພົ້ນ ແລະ ເຮົາບໍ່ໄດ້ເອົາຊະນະຈະຕົກລົງໄປໃນທະເລເລິກຢ່າງງຽບໆ ແລະ ຈະຖືກເຜົາໄໝ້ໂດຍແປວໄຟທີ່ທຳລາຍລ້າງຂອງ

ເຮົາຕະຫຼອດໄປເປັນນິດ. ເຮົາຈະທຳລາຍມະນຸດຊາດກຸ່ມເກົ່າແກ່ ແລະ ສົກກະປົກຫຼາຍທີ່ສຸດເຫຼົ່ານີ້ ດັ່ງທີ່ເຮົາໄດ້ທຳລາຍລູກຊາຍກົກ ແລະ ງົວຂອງອີຢິບ, ລະເວັ້ນພຽງຊາວອິດສະຣາເອ ຜູ້ທີ່ໄດ້ກິນຊີ້ນແກະ, ດື່ມເລືອດແກະ ແລະ ທາເລືອດແກະໃສ່ໄມ້ຂອບວົງປະຕູຂອງພວກເຂົາ. ຜູ້ຄົນທີ່ເຮົາໄດ້ເອົາຊະນະ ແລະ ເປັນຄອບຄົວຂອງເຮົາບໍ່ແມ່ນຜູ້ຄົນທີ່ກິນຊີ້ນຂອງແກະເຊິ່ງແມ່ນເຮົາ ແລະ ດື່ມເລືອດຂອງແກະເຊິ່ງແມ່ນເຮົາ ແລະ ທີ່ໄດ້ຮັບການໄຖ່ຈາກເຮົາ ແລະ ສັນລະເສີນເຮົາບໍ? ຜູ້ຄົນເຫຼົ່ານັ້ນຈະບໍ່ໄດ້ຮັບການຕິດຕາມໂດຍລັດສະໝີຂອງເຮົາບໍ? ຄົນເຫຼົ່ານັ້ນທີ່ປາສະຈາກຊີ້ນຂອງແກະເຊິ່ງແມ່ນເຮົາ ບໍ່ໄດ້ຈົມລົງສູ່ທະເລເລິກຢ່າງງຽບໆແລ້ວບໍ? ມື້ນີ້ ພວກເຈົ້າຕໍ່ຕ້ານເຮົາ ແລະ ມື້ນີ້ ພຣະທຳຂອງເຮົາກໍເປັນສິ່ງດຽວກັນກັບທີ່ພຣະເຢໂຮວາໄດ້ກ່າວກັບລູກ ແລະ ຫຼານຂອງອິດສະຣາເອນ. ແຕ່ຄວາມແຂງກະດ້າງໃນສ່ວນເລິກຂອງຫົວໃຈຂອງພວກເຈົ້າກຳລັງເຮັດໃຫ້ຄວາມໂກດຮ້າຍຂອງເຮົາເພີ່ມຂຶ້ນເລື້ອຍໆ, ນຳເອົາຄວາມທົນທຸກທໍລະມານມາຍັງເນື້ອໜັງຂອງພວກເຈົ້າເພີ່ມຂຶ້ນອີກ, ການພິພາກສາຄວາມຜິດບາບທີ່ຫຼາຍຂຶ້ນ ແລະ ຄວາມໂກດຮ້າຍໃນຄວາມບໍ່ທ່ຽງທຳຂອງພວກເຈົ້າທີ່ເພີ່ມຂຶ້ນ. ແລ້ວໃຜທີ່ສາມາດຍົກເວັ້ນໃນມື້ທີ່ເຮົາໂກດຮ້າຍ ໃນເມື່ອພວກເຈົ້າປະຕິບັດຕໍ່ເຮົາຄືດັ່ງທຸກວັນນີ້? ຄວາມບໍ່ທ່ຽງທຳຂອງໃຜແນ່ທີ່ສາມາດລອດພົ້ນຈາກສາຍຕາແຫ່ງການລົງໂທດຂອງເຮົາ? ຄວາມຜິດບາບຂອງໃຜແນ່ທີ່ສາມາດໜີພົ້ນຈາກມືຂອງເຮົາ ນັ້ນຄືອົງຊົງລິດທານຸພາບສູງສຸດ? ການທ້າທາຍຂອງໃຜແນ່ທີ່ສາມາດລອດພົ້ນຈາກການພິພາກສາຂອງເຮົາ ນັ້ນຄື ອົງຊົງລິດທານຸພາບສູງສຸດ? ດ້ວຍເຫດນັ້ນ ເຮົາຄືພຣະເຢໂຮວາ ທີ່ກ່າວກັບພວກເຈົ້າ, ເຊື້ອສາຍຂອງຄອບຄົວຕ່າງຊາດ ແລະ ພຣະທຳທີ່ເຮົາກ່າວກັບເຈົ້າຍິ່ງໃຫຍ່ກວ່າຖ້ອຍຄຳຂອງຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນ ແຕ່ເຈົ້າກໍແຂງກະດ້າງຫຼາຍກວ່າປະຊາຊົນທັງໝົດຂອງອີຢິບ. ພວກເຈົ້າບໍ່ໄດ້ສະສົມຄວາມໂກດຮ້າຍຂອງເຮົາໃນຂະນະທີ່ເຮົາດຳເນີນພາລະກິດຂອງເຮົາຢ່າງສະຫງົບງຽບບໍ? ພວກເຈົ້າຈະສາມາດລອດພົ້ນຢ່າງປອດໄພຈາກວັນຂອງເຮົາ, ອົງຊົງລິດທານຸພາບສູງສຸດໄດ້ແນວໃດ?

ເຮົາໄດ້ດຳເນີນພາລະກິດ ແລະ ກ່າວແບບນີ້ທ່າມກາງພວກເຈົ້າ, ເຮົາໄດ້ໃຊ້ກຳລັງ ແລະ ຄວາມພະຍາຍາມຢ່າງຫຼວງຫຼາຍ ແຕ່ພວກເຈົ້າເຄີຍເຊື່ອຟັງໃນສິ່ງທີ່ເຮົາບອກພວກເຈົ້າຢ່າງແຈ່ມແຈ້ງນີ້ບໍ? ຢູ່ໃສແດ່ທີ່ພວກເຈົ້າເຄີຍກົ້ມຂາບລົງຕໍ່ເຮົາ ອົງຊົງລິດທານຸພາບສູງສຸດ? ເປັນຫຍັງພວກເຈົ້າຈຶ່ງປະຕິບັດຕໍ່ເຮົາແບບນີ້? ເປັນຫຍັງທຸກສິ່ງທີ່ພວກເຈົ້າເວົ້າ ແລະ ກະທຳຈຶ່ງເຮັດໃຫ້ເຮົາໂກດຮ້າຍ? ເປັນຫຍັງຫົວໃຈຂອງພວກເຈົ້າຈຶ່ງແຂງກະດ້າງ? ເຮົາເຄີຍໂຈມຕີພວກເຈົ້າບໍ? ເປັນຫຍັງພວກເຈົ້າຈຶ່ງບໍ່ເຮັດຫຍັງ ມີແຕ່ເຮັດໃຫ້ເຮົາໂສກເສົ້າ ແລະ ກັງວົນໃຈ? ພວກເຈົ້າກຳລັງລໍຖ້າມື້ແຫ່ງຄວາມໂກດຮ້າຍຂອງເຮົາ ຜູ້ເປັນພຣະເຢໂຮວາ ໃຫ້ມາເຖິງພວກເຈົ້າບໍ? ພວກເຈົ້າກຳລັງລໍຖ້າໃຫ້ເຮົາສຳແດງຄວາມໂກດຮ້າຍທີ່ເກີດຈາກການທີ່ພວກເຈົ້າບໍ່ເຊື່ອຟັງບໍ? ທຸກສິ່ງທີ່ເຮົາເຮັດບໍ່ແມ່ນເພື່ອພວກເຈົ້າບໍ? ແຕ່ພວກເຈົ້າກໍປະຕິບັດຕໍ່ເຮົາ ຜູ້ເປັນພຣະເຢໂຮວາ ແບບນີ້ຢູ່ເປັນປະຈຳ: ລັກເອົາເຄື່ອງບູຊາຂອງເຮົາ, ເອົາເຄື່ອງບູຊາເທິງແທ່ນບູຊາຂອງເຮົາກັບບ້ານໄປຫາຖໍ້າໝາປ່າເພື່ອລ້ຽງລູກໝາປ່າ ແລະ ລູກຂອງລູກຂອງໝາປ່າທີ່ຢູ່ໃນຖໍ້າຂອງໝາປ່າ; ຜູ້ຄົນຕໍ່ສູ້ກັນເອງ, ຜະເຊີນໜ້າກັນແລະກັນດ້ວຍດາບ ແລະ ຫອກຢ່າງໂກດແຄ້ນ,

ໂຍນພຣະທຳຂອງເຮົາ ອົງຊົງລິດທານຸພາບສູງສຸດຖິ້ມລົງໃນສ້ວມໃຫ້ສົກກະປົກຄືກັບອາຈົມ. ຄວາມຊື່ສັດຂອງພວກເຈົ້າຢູ່ໃສ? ຄວາມເປັນມະນຸດຂອງພວກເຈົ້າໄດ້ກາຍເປັນຄວາມເປັນສັດແລ້ວ! ຫົວໃຈຂອງພວກເຈົ້າໄດ້ກາຍເປັນຫີນຕັ້ງແຕ່ດົນນານມາແລ້ວ. ພວກເຈົ້າບໍ່ຮູ້ບໍວ່າ ເວລາແຫ່ງຄວາມໂກດຮ້າຍຂອງເຮົາມາເຖິງຈະເປັນເວລາທີ່ເຮົາຈະພິພາກສາຄວາມຊົ່ວຮ້າຍທີ່ພວກເຈົ້າໄດ້ເຮັດກັບເຮົາ ນັ້ນຄືອົງຊົງລິດທານຸພາບສູງສຸດ ໃນມື້ນີ້? ພວກເຈົ້າຄິດບໍວ່າ ໂດຍການຫຼອກລວງເຮົາດ້ວຍວິທີນີ້ ໂດຍການໂຍນພຣະທຳຂອງເຮົາຖິ້ມລົງໃນຕົມ ແລະ ບໍ່ຮັບຟັງພຣະທຳນັ້ນເລີຍ, ພວກເຈົ້າຄິດບໍວ່າ ໂດຍການເຮັດແບບນີ້ລັບຫຼັງເຮົາ ພວກເຈົ້າຈະສາມາດລອດພົ້ນຈາກສາຍຕາແຫ່ງຄວາມໂກດຮ້າຍຂອງເຮົາ? ພວກເຈົ້າບໍ່ຮູ້ບໍວ່າ ສາຍຕາຂອງເຮົາ ຜູ້ເປັນພຣະເຢໂຮວາ ເຫັນພວກເຈົ້າແລ້ວ ເມື່ອພວກເຈົ້າລັກເຄື່ອງບູຊາຂອງເຮົາ ແລະ ອິດສາຢາກໄດ້ສິ່ງທີ່ເປັນຂອງເຮົາ? ພວກເຈົ້າບໍ່ຮູ້ບໍວ່າ ເມື່ອພວກເຈົ້າລັກເຄື່ອງບູຊາຂອງເຮົາ, ເຈົ້າເຮັດແບບນັ້ນຕໍ່ໜ້າແທ່ນບູຊາທີ່ມີການຖວາຍເຄື່ອງບູຊາ? ພວກເຈົ້າເຊື່ອວ່າຕົນເອງສະຫຼາດພຽງພໍໄດ້ແນວໃດທີ່ຈະຫຼອກລວງເຮົາດ້ວຍວິທີນີ້? ຄວາມໂກດຮ້າຍຂອງເຮົາຈະອອກຫ່າງຈາກຄວາມຜິດບາບທີ່ຊົ່ວຮ້າຍຂອງພວກເຈົ້າໄດ້ແນວໃດ? ຄວາມໂກດຮ້າຍຂອງເຮົາຈະຂ້າມການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າໄດ້ແນວໃດ? ຄວາມຊົ່ວຮ້າຍທີ່ພວກເຈົ້າໄດ້ເຮັດໃນມື້ນີ້ ບໍ່ມີທາງອອກໃຫ້ກັບພວກເຈົ້າ ແຕ່ສະສົມການລົງໂທດໃຫ້ກັບພວກເຈົ້າໃນມື້ຕໍ່ໄປ; ມັນທ້າທາຍການລົງໂທດຂອງເຮົາອົງຊົງລິດທານຸພາບສູງສຸດທີ່ມີໃຫ້ກັບພວກເຈົ້າ. ການກະທຳທີ່ຊົ່ວຮ້າຍ ແລະ ຄຳເວົ້າທີ່ຊົ່ວຮ້າຍຂອງພວກເຈົ້າຈະສາມາດລອດພົ້ນຈາກການລົງໂທດຂອງເຮົາໄດ້ແນວໃດ? ຄຳອະທິຖານຂອງພວກເຈົ້າຈະສາມາດມາເຖິງຫູຂອງເຮົາໄດ້ແນວໃດ? ເຮົາຈະເປີດທາງອອກໃຫ້ກັບຄວາມບໍ່ທ່ຽງທຳຂອງພວກເຈົ້າໄດ້ແນວໃດ? ເຮົາຈະປ່ອຍການກະທຳທີ່ຊົ່ວຮ້າຍທີ່ພວກເຈົ້າທ້າທາຍເຮົາໄດ້ແນວໃດ? ເຮົາຈະບໍ່ຕັດລີ້ນຂອງພວກເຈົ້າທີ່ເຕັມໄປດ້ວຍຄວາມກຽດຊັງຄືກັບງູໄດ້ແນວໃດ? ພວກເຈົ້າບໍ່ໄດ້ຂໍຮ້ອງເຮົາເພື່ອເຫັນແກ່ຜົນປະໂຫຍດຂອງຄວາມທ່ຽງທຳຂອງເຮົາ ແຕ່ ກົງກັນຂ້າມ ພວກເຈົ້າສະສົມຄວາມໂກດຮ້າຍຂອງເຮົາທີ່ເປັນຜົນມາຈາກຄວາມບໍ່ທ່ຽງທຳຂອງພວກເຈົ້າ. ເຮົາຈະສາມາດຍົກໂທດໃຫ້ພວກເຈົ້າໄດ້ແນວໃດ? ໃນສາຍຕາຂອງເຮົາ ອົງຊົງລິດທານຸພາບສູງສຸດ, ຄຳເວົ້າ ແລະ ການກະທຳຂອງພວກເຈົ້າແມ່ນສົກກະປົກ. ສາຍຕາຂອງເຮົາ ອົງຊົງລິດທານຸພາບສູງສຸດ ເຫັນຄວາມບໍ່ທ່ຽງທຳຂອງພວກເຈົ້າຄືກັບການລົງໂທດທີ່ບໍ່ລົດລະ. ການລົງໂທດ ແລະ ການພິພາກສາທີ່ທ່ຽງທຳຂອງເຮົາຈະສາມາດອອກຫ່າງຈາກພວກເຈົ້າໄດ້ແນວໃດ? ຍ້ອນພວກເຈົ້າເຮັດສິ່ງນີ້ກັບເຮົາ ເຮັດໃຫ້ເຮົາໂສກເສົ້າ ແລະ ໂກດຮ້າຍ ເຮົາຈະໃຫ້ພວກເຈົ້າລອດພົ້ນຈາກມືຂອງເຮົາ ແລະ ອອກຫ່າງຈາກມື້ທີ່ເຮົາ ຜູ້ເປັນພຣະເຢໂຮວາຈະລົງໂທດ ແລະ ສາບແຊ່ງພວກເຈົ້າໄດ້ແນວໃດ? ພວກເຈົ້າບໍ່ຮູ້ບໍວ່າ ຄຳເວົ້າ ແລະ ຖ້ອຍຄຳທີ່ຊົ່ວຮ້າຍຂອງພວກເຈົ້າໄດ້ມາເຖິງຫູເຮົາແລ້ວ? ພວກເຈົ້າບໍ່ຮູ້ບໍວ່າ ຄວາມບໍ່ທ່ຽງທຳຂອງພວກເຈົ້າໄດ້ເຮັດໃຫ້ຜ້າຄຸມແຫ່ງຄວາມທ່ຽງທຳອັນສັກສິດຂອງເຮົາເປິເປື້ອນ? ພວກເຈົ້າບໍ່ຮູ້ບໍວ່າ ຄວາມບໍ່ເຊື່ອຟັງຂອງພວກເຈົ້າໄດ້ທ້າທາຍຄວາມໂມໂຫທີ່ແຮງກ້າຂອງເຮົາ? ພວກເຈົ້າບໍ່ຮູ້ບໍວ່າ ພວກເຈົ້າໄດ້ເຮັດໃຫ້ເຮົາໃຈຮ້າຍຕັ້ງແຕ່ດົນນານມາແລ້ວ ແລະ ໄດ້ທົດສອບຄວາມອົດທົນຂອງເຮົາເປັນເວລາ

ດົນນານມາແລ້ວເຊັ່ນກັນ? ພວກເຈົ້າບໍ່ຮູ້ບໍວ່າ ພວກເຈົ້າໄດ້ທຳລາຍເນື້ອໜັງຂອງເຮົາ, ບັນທອນມັນຈົນກາຍເປັນຜ້າຂາດ? ເຮົາໄດ້ອົດທົນຈົນຮອດຕອນນີ້, ເຊັ່ນນັ້ນ ເຮົາຈຶ່ງປ່ອຍຄວາມໂກດຮ້າຍຂອງເຮົາ, ບໍ່ອົດທົນຕໍ່ພວກເຈົ້າອີກຕໍ່ໄປ. ພວກເຈົ້າບໍ່ຮູ້ບໍວ່າ ການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າໄດ້ມາເຖິງຫູຂອງເຮົາແລ້ວ ແລະ ສຽງຮ້ອງໄຫ້ຂອງເຮົາກໍໄດ້ໄປເຖິງຫູຂອງພຣະບິດາຂອງເຮົາ? ພຣະອົງຈະອະນຸຍາດໃຫ້ພວກເຈົ້າປະຕິບັດຕໍ່ເຮົາແບບນີ້ໄດ້ແນວໃດ? ມີພາລະກິດໃດແດ່ຂອງເຮົາທີ່ບໍ່ໄດ້ດຳເນີນເພື່ອເຫັນແກ່ຜົນປະໂຫຍດຂອງພວກເຈົ້າ? ແຕ່ມີຜູ້ໃດແດ່ໃນບັນດາພວກເຈົ້າທີ່ຮັກພາລະກິດຂອງເຮົາຫຼາຍຂຶ້ນ ຜູ້ເປັນພຣະເຢໂຮວາຫຼາຍຂຶ້ນ? ເຮົາຈະບໍ່ສັດຊື່ກັບຄວາມປະສົງຂອງພຣະບິດາຂອງເຮົາ ຍ້ອນວ່າເຮົາອ່ອນແອ ແລະ ຍ້ອນຄວາມທຸກທໍລະມານໃຈທີ່ເຮົາໄດ້ຮັບບໍ? ພວກເຈົ້າບໍ່ເຂົ້າໃຈຫົວໃຈຂອງເຮົາບໍ? ເຮົາກ່າວກັບພວກເຈົ້າດັ່ງທີ່ພຣະເຢໂຮວາໄດ້ກ່າວ; ເຮົາບໍ່ໄດ້ອຸທິດຫຼາຍຢ່າງເພື່ອພວກເຈົ້າບໍ? ເຖິງແມ່ນວ່າເຮົາເຕັມໃຈແບກຮັບຄວາມທົນທຸກທໍລະມານນີ້ທັງໝົດເພື່ອເຫັນແກ່ຜົນປະໂຫຍດຂອງພາລະກິດຂອງພຣະບິດາຂອງເຮົາ, ເຮົາຈະປ່ອຍໃຫ້ພວກເຈົ້າເປັນອິດສະຫຼະຈາກການລົງໂທດທີ່ເຮົາຈະນຳມາຍັງພວກເຈົ້າ ເຊິ່ງເປັນຜົນມາຈາກການທົນທຸກທໍລະມານຂອງເຮົາໄດ້ແນວໃດ? ພວກເຈົ້າບໍ່ໄດ້ຊື່ນຊົມໃນຕົວເຮົາຢ່າງລົ້ນເຫຼືອບໍ? ມື້ນີ້ ພຣະບິດາຂອງເຮົາໄດ້ປະທານເຮົາໃຫ້ພວກເຈົ້າ; ພວກເຈົ້າບໍ່ຮູ້ບໍວ່າ ພວກເຈົ້າໄດ້ຮັບຫຼາຍກວ່າພຣະທຳທີ່ອຸດົມສົມບູນຂອງເຮົາ? ພວກເຈົ້າບໍ່ຮູ້ບໍວ່າ ຊີວິດຂອງເຮົາຖືກແລກກັບຊີວິດຂອງພວກເຈົ້າ ແລະ ກັບສິ່ງທີ່ພວກເຈົ້າໄດ້ຮັບ? ພວກເຈົ້າບໍ່ຮູ້ບໍວ່າ ພຣະບິດາຂອງເຮົາໃຊ້ຊີວິດຂອງເຮົາເພື່ອເຮັດສົງຄາມກັບຊາຕານ ແລະ ພຣະອົງຍັງໄດ້ປະທານຊີວິດຂອງເຮົາໃຫ້ກັບພວກເຈົ້າ ເພື່ອເຮັດໃຫ້ພວກເຈົ້າໄດ້ຮັບຮ້ອຍເທົ່າ ແລະ ເພື່ອໃຫ້ພວກເຈົ້າຫຼີກເວັ້ນຈາກການທົດລອງຫຼາຍຢ່າງ? ພວກເຈົ້າບໍ່ຮູ້ບໍວ່າ ມີພຽງແຕ່ໂດຍພາລະກິດຂອງເຮົາ ເຈົ້າຈຶ່ງຈະຖືກລະເວັ້ນຈາກການທົດລອງຫຼາຍຢ່າງ ແລະ ຈາກການລົງໂທດທີ່ກຳລັງລຸກໄໝ້ຫຼາຍຢ່າງ? ພວກເຈົ້າບໍ່ຮູ້ບໍວ່າ ຍ້ອນເຮົາພຽງເທົ່ານັ້ນທີ່ພຣະບິດາຂອງເຮົາເຮັດໃຫ້ພວກເຈົ້າໄດ້ຮັບຄວາມສຸກໃຈຈົນຮອດບັດນີ້? ທຸກມື້ນີ້ພວກເຈົ້າຍັງແຂງກະດ້າງຢ່າງໜັກ ແລະ ບໍ່ຍອມອ່ອນນ້ອມໄດ້ແນວໃດ, ມັນຄືກັບວ່າ ຄວາມຕາຍດ້ານໄດ້ເກີດຂຶ້ນໃນໃຈຂອງພວກເຈົ້າບໍ? ສິ່ງຊົ່ວຮ້າຍທີ່ພວກເຈົ້າເຮັດໃນມື້ນີ້ຈະເຮັດໃຫ້ພວກເຈົ້າລອດພົ້ນຈາກມື້ແຫ່ງຄວາມໂກດຮ້າຍທີ່ຈະເກີດຂຶ້ນຫຼັງຈາກການຈາກລາຂອງເຮົາຈາກແຜ່ນດິນໂລກໄດ້ແນວໃດ? ເຮົາຈະອະນຸຍາດໃຫ້ຄົນເຫຼົ່ານັ້ນທີ່ມີຫົວໃຈທີ່ແຂງກະດ້າງ ແລະ ບໍ່ຍອມອ່ອນນ້ອມລອດພົ້ນຈາກຄວາມໂກດຮ້າຍຂອງພຣະເຢໂຮວາໄດ້ແນວໃດ?

ຈົ່ງຄິດທົບທວນໃນອະດີດ: ເມື່ອໃດທີ່ສາຍຕາຂອງເຮົາເກີດມີຄວາມໂກດຮ້າຍ ແລະ ນໍ້າສຽງຂອງເຮົາເກີດມີຄວາມຮຸນແຮງກັບພວກເຈົ້າ? ເມື່ອໃດທີ່ເຮົາໂຕ້ຖຽງກ່ຽວກັບເລື່ອງເລັກໆນ້ອຍໆກັບພວກເຈົ້າ? ເມື່ອໃດທີ່ເຮົາລົງໂທດຕັກເຕືອນພວກເຈົ້າຢ່າງບໍ່ສົມເຫດສົມຜົນ? ເມື່ອໃດທີ່ເຮົາລົງໂທດຕັກເຕືອນພວກເຈົ້າຕໍ່ໜ້າພວກເຈົ້າ? ມັນບໍ່ແມ່ນຍ້ອນເຫັນແກ່ຜົນປະໂຫຍດຂອງພາລະກິດຂອງເຮົາບໍທີ່ເຮົາຂໍໃຫ້ພຣະບິດາຂອງເຮົາຮັກສາພວກເຈົ້າຈາກການທົດລອງທຸກຢ່າງ? ເປັນຫຍັງພວກເຈົ້າຈຶ່ງປະຕິບັດຕໍ່ເຮົາແບບນີ້? ເຮົາເຄີຍໃຊ້ອຳນາດຂອງເຮົາເພື່ອໂຈມຕີເນື້ອໜັງຂອງພວກເຈົ້າບໍ? ເປັນຫຍັງ

ພວກເຈົ້າຈຶ່ງຕອບແທນເຮົາແບບນີ້? ຫຼັງຈາກທີ່ທຳທ່າສິນໃຈເຮົາ ເຈົ້າກໍຍັງບໍ່ຮ້ອນ ຫຼື ບໍ່ເຢັນ ແລະ ແລ້ວເຈົ້າກໍພະຍາຍາມໂນ້ມນ້າວເຮົາ ແລະ ເຊື່ອງສິ່ງຕ່າງໆຈາກເຮົາ ແລະ ປາກຂອງພວກເຈົ້າກໍເຕັມໄປດ້ວຍນ້ຳລາຍແຫ່ງຄວາມບໍ່ທ່ຽງທຳ. ພວກເຈົ້າຄິດວ່າ ລີ້ນຂອງພວກເຈົ້າຈະສາມາດຫຼອກລວງພຣະວິນຍານຂອງເຮົາໄດ້ບໍ? ພວກເຈົ້າຄິດວ່າ ລີ້ນຂອງພວກເຈົ້າສາມາດລອດພົ້ນຈາກຄວາມໂກດຮ້າຍຂອງເຮົາໄດ້ບໍ? ພວກເຈົ້າຄິດວ່າ ລີ້ນຂອງພວກເຈົ້າຈະສາມາດຕັດສິນການກະທຳຂອງເຮົາ ຜູ້ເປັນພຣະເຢໂຮວາ ຕາມທີ່ລີ້ນຂອງພວກເຈົ້າຕ້ອງການໄດ້ບໍ? ເຮົາເປັນພຣະເຈົ້າຜູ້ທີ່ຖືກມະນຸດດຳເນີນການພິພາກສາບໍ? ເຮົາຈະອະນຸຍາດໃຫ້ໜອນນ້ອຍໆມາເວົ້າໝິ່ນປະໝາດເຮົາແບບນີ້ບໍ? ເຮົາຈະຈັດວາງລູກແຫ່ງຄວາມບໍ່ເຊື່ອຟັງດັ່ງກ່າວໄວ້ທ່າມກາງການຮັບພອນທີ່ບໍ່ສິ້ນສຸດຂອງເຮົາໄດ້ແນວໃດ? ຄຳເວົ້າ ແລະ ການກະທຳຂອງພວກເຈົ້າໄດ້ເປີດເຜີຍ ແລະ ກ່າວໂທດພວກເຈົ້າເປັນເວລາດົນນານມາແລ້ວ. ເມື່ອເຮົາກາງທ້ອງຟ້າອອກ ແລະ ສ້າງທຸກສິ່ງຂຶ້ນ ເຮົາບໍ່ອະນຸຍາດໃຫ້ສິ່ງທີ່ມີຊີວິດໃດກໍຕາມມີສ່ວນຮ່ວມຕາມທີ່ພວກເຂົາມັກ, ເຮົາບໍ່ເຄີຍອະນຸຍາດໃຫ້ສິ່ງໃດທຳລາຍພາລະກິດຂອງເຮົາ ແລະ ການຄຸ້ມຄອງຂອງເຮົາຕາມທີ່ມັນຕ້ອງການໃນແບບໃດກໍຕາມ. ເຮົາບໍ່ອົດທົນຕໍ່ມະນຸດ ຫຼື ສິ່ງຂອງ; ເຮົາຈະສາມາດຍົກໂທດໃຫ້ກັບຄົນເຫຼົ່ານັ້ນທີ່ໂຫດຮ້າຍ ແລະ ບໍ່ມີເມດຕາຕໍ່ເຮົາໄດ້ແນວໃດ? ເຮົາຈະສາມາດໃຫ້ອະໄພກັບຄົນເຫຼົ່ານັ້ນທີ່ກະບົດຕໍ່ພຣະທຳຂອງເຮົາໄດ້ແນວໃດ? ເຮົາຈະຍົກໂທດໃຫ້ກັບຄົນເຫຼົ່ານັ້ນທີ່ບໍ່ເຊື່ອຟັງເຮົາໄດ້ແນວໃດ? ຊະຕາກຳຂອງມະນຸດບໍ່ໄດ້ຢູ່ໃນມືຂອງເຮົາ ອົງຊົງລິດທານຸພາບສູງສຸດບໍ? ເຮົາຈະພິຈາລະນາໃຫ້ຄວາມບໍ່ທ່ຽງທຳ ແລະ ຄວາມບໍ່ເຊື່ອຟັງຂອງເຈົ້າເປັນສິ່ງທີ່ບໍລິສຸດໄດ້ແນວໃດ? ຄວາມຜິດບາບຂອງເຈົ້າຈະທຳລາຍຄວາມບໍລິສຸດຂອງເຮົາໄດ້ແນວໃດ? ເຮົາບໍ່ຖືກທຳລາຍໂດຍຄວາມບໍ່ບໍລິສຸດຂອງຄົນທີ່ບໍ່ທ່ຽງທຳ ຫຼື ເຮົາບໍ່ຮັບເອົາການຖວາຍບູຊາຂອງຄົນທີ່ບໍ່ທ່ຽງທຳ. ຖ້າເຈົ້າຊື່ສັດກັບເຮົາ ຜູ້ເປັນພຣະເຢໂຮວາ ເຈົ້າສາມາດເອົາເຄື່ອງຖວາຍບູຊາທີ່ແທ່ນບູຊາຂອງເຮົາບໍ? ເຈົ້າສາມາດໃຊ້ລີ້ນທີ່ເປັນພິດຂອງເຈົ້າເວົ້າໝິ່ນປະໝາດນາມສັກສິດຂອງເຮົາໄດ້ບໍ? ເຈົ້າສາມາດກະບົດຕໍ່ພຣະທຳຂອງເຮົາແບບນີ້ໄດ້ບໍ? ເຈົ້າສາມາດປະຕິບັດຕໍ່ລັດສະໝີ ແລະ ນາມສັກສິດຂອງເຮົາຄືກັບເຄື່ອງມືທີ່ຮັບໃຊ້ຊາຕານ ຜູ້ທີ່ຊົ່ວຮ້າຍບໍ? ຊີວິດຂອງເຮົາແມ່ນເພື່ອຄວາມຊື່ນບານຂອງຄົນທີ່ບໍລິສຸດ. ເຮົາສາມາດອະນຸຍາດໃຫ້ເຈົ້າຫຼິ້ນກັບຊີວິດຂອງເຮົາຕາມທີ່ເຈົ້າຕ້ອງການ ແລະ ໃຊ້ມັນເປັນເຄື່ອງມືໃນການສ້າງຂໍ້ຂັດແຍ້ງທ່າມກາງພວກເຈົ້າເອງໄດ້ແນວໃດ? ພວກເຈົ້າບໍ່ມີຄວາມເມດຕາເລີຍ ແລະ ຂາດວິທີທາງແຫ່ງຄວາມດີ ໃນວິທີທີ່ພວກເຈົ້າມີຕໍ່ເຮົາໄດ້ແນວໃດ? ພວກເຈົ້າບໍ່ຮູ້ບໍວ່າ ເຮົາໄດ້ບັນທຶກການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າລົງໃນພຣະທຳແຫ່ງຊີວິດແລ້ວ? ພວກເຈົ້າຈະລອດພົ້ນມື້ແຫ່ງຄວາມໂກດຮ້າຍເມື່ອເຮົາລົງໂທດອີຢິບໄດ້ແນວໃດ? ເຮົາຈະອະນຸຍາດໃຫ້ພວກເຈົ້າຕໍ່ຕ້ານ ແລະ ບໍ່ຍອມເຊື່ອຟັງເຮົາແບບນີ້ ເທື່ອແລ້ວເທື່ອເລົ່າໄດ້ແນວໃດ? ເຮົາບອກເຈົ້າຢ່າງແຈ່ມແຈ້ງ ເມື່ອຮອດມື້ນັ້ນການລົງໂທດຂອງພວກເຈົ້າຈະໜັກຫຼາຍກວ່າຂອງອີຢິບ! ພວກເຈົ້າຈະສາມາດລອດພົ້ນຈາກມື້ແຫ່ງຄວາມໂກດຮ້າຍຂອງເຮົາໄດ້ແນວໃດ? ເຮົາບອກພວກເຈົ້າຕາມຄວາມຈິງ: ຄວາມອົດທົນຂອງເຮົາຖືກກຽມໄວ້ສຳລັບການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າ ແລະ ມີຢູ່ເພື່ອການລົງໂທດຂອງພວກເຈົ້າໃນມື້ນັ້ນ.

ພວກເຈົ້າບໍ່ແມ່ນຄົນທີ່ຈະທໍລະມານຕໍ່ການພິພາກສາທີ່ໂກດຮ້າຍ ເມື່ອເຮົາໝົດຄວາມອົດທົນນັ້ນບໍ? ທຸກສິ່ງທຸກຢ່າງບໍ່ໄດ້ຢູ່ໃນກຳມືຂອງເຮົາ ນັ້ນກໍຄື ອົງຊົງລິດທານຸພາບສູງສຸດ ບໍ? ດັ່ງນັ້ນ ພາຍໃຕ້ທ້ອງຟ້ານີ້ ເຮົາຈະໃຫ້ພວກເຈົ້າບໍ່ເຊື່ອຟັງເຮົາແບບນັ້ນໄດ້ແນວໃດ? ຊີວິດຂອງພວກເຈົ້າຈະຫຍຸ້ງຍາກຫຼາຍ ເພາະພວກເຈົ້າໄດ້ພົບກັບພຣະເມຊີອາ ຕາມທີ່ຖືກກ່າວຂານໄວ້ວ່າ ພຣະອົງຈະສະເດັດມາ ແຕ່ບໍ່ເຄີຍມາຈັກເທື່ອ. ພວກເຈົ້າບໍ່ແມ່ນສັດຕູຂອງພຣະອົງບໍ? ພຣະເຢຊູເປັນເພື່ອນກັບພວກເຈົ້າ ແຕ່ພວກເຈົ້າເປັນສັດຕູກັບພຣະເມຊີອາ. ພວກເຈົ້າບໍ່ຮູ້ບໍວ່າ ເຖິງພວກເຈົ້າເປັນເພື່ອນກັບພຣະເຢຊູ ແຕ່ການກະທຳຊົ່ວຮ້າຍຂອງພວກເຈົ້າແມ່ນຝັງເລິກຢູ່ໃນເສັ້ນເລືອດຂອງຜູ້ຄົນທີ່ໜ້າລັງກຽດທີ່ສຸດ? ເຖິງແມ່ນພວກເຈົ້າຈະໃກ້ຊິດກັບພຣະເຢໂຮວາຫຼາຍ ແຕ່ພວກເຈົ້າບໍ່ຮູ້ບໍວ່າ ຄຳເວົ້າທີ່ຊົ່ວຮ້າຍຂອງພວກເຈົ້າໄດ້ໄປເຖິງຫູຂອງພຣະເຢໂຮວາ ແລະ ທ້າທາຍຄວາມໂກດຮ້າຍຂອງພຣະອົງ? ພຣະອົງຈະໃກ້ຊິດກັບເຈົ້າໄດ້ແນວໃດ ແລະ ພຣະອົງຈະບໍ່ເຜົາເສັ້ນເລືອດຂອງພວກເຈົ້າທີ່ເຕັມໄປດ້ວຍການກະທຳຊົ່ວຮ້າຍໄດ້ແນວໃດ? ພຣະອົງຈະບໍ່ສາມາດເປັນສັດຕູຂອງເຈົ້າໄດ້ແນວໃດ?

# ພຣະຜູ້ຊ່ວຍໃຫ້ລອດພົ້ນໄດ້ກັບຄືນມາເທິງ "ກ້ອນເມກສີຂາວ"

ເປັນເວລາຫຼາຍພັນປີມາແລ້ວ ມະນຸດໄດ້ປາດຖະໜາຢາກເຫັນການມາເຖິງຂອງພຣະຜູ້ຊ່ວຍໃຫ້ລອດພົ້ນ. ມະນຸດປາດຖະໜາຢາກເຫັນພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນຂີ່ກ້ອນເມກສີຂາວເມື່ອພຣະອົງລົງມາດ້ວຍຕົນເອງຢູ່ທ່າມກາງຜູ້ທີ່ລໍຄອຍ ແລະ ປາດຖະໜາຢາກເຫັນພຣະອົງເປັນເວລາຫຼາຍພັນປີມາແລ້ວ. ມະນຸດຍັງປາດຖະໜາໃຫ້ພຣະຜູ້ຊ່ວຍໃຫ້ລອດພົ້ນກັບຄືນມາ ແລະ ມາຢູ່ຮ່ວມກັບພວກເຂົາ; ນັ້ນກໍ່ຄືໃຫ້ພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນຜູ້ທີ່ໄດ້ແຍກຈາກຜູ້ຄົນເປັນເວລາຫຼາຍພັນປີກັບຄືນມາ ແລະ ປະຕິບັດພາລະກິດແຫ່ງການໄຖ່ບາບທີ່ພຣະອົງເຄີຍເຮັດໃນທ່າມກາງຄົນຢິວອີກຄັ້ງ, ໃຫ້ພຣະອົງຈະມີຄວາມສົງສານ ແລະ ມີຄວາມຮັກຕໍ່ມະນຸດ, ໃຫ້ອະໄພບາບແກ່ມະນຸດ ແລະ ແບກຮັບຄວາມຜິດບາບຂອງມະນຸດ ແລະ ເຖິງກັບແບກຮັບເອົາການກະທຳຜິດຂອງມະນຸດທຸກຄົນ ແລະ ນຳມະນຸດອອກຈາກຄວາມຜິດບາບ. ສິ່ງທີ່ພວກເຂົາປາດຖະໜາກໍ່ຄືໃຫ້ພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນເປັນຄືແຕ່ກ່ອນ ນັ້ນກໍ່ຄືເປັນພຣະຜູ້ຊ່ວຍໃຫ້ລອດທີ່ເຕັມໄປດ້ວຍຄວາມຮັກ, ມີເມດຕາ ແລະ ໜ້າເຄົາລົບນັບຖື, ເປັນຜູ້ທີ່ບໍ່ເຄີຍໂກດຮ້າຍຕໍ່ມະນຸດ ແລະ ຜູ້ທີ່ບໍ່ເຄີຍຕຳນິມະນຸດ, ແຕ່ເປັນຜູ້ທີ່ໃຫ້ອະໄພ ແລະ ແບກຮັບເອົາບາບທັງໝົດຂອງມະນຸດ ແລະ ຜູ້ທີ່ເຖິງກັບຕາຍເທິງໄມ້ກາງແຂນເພື່ອມະນຸດຄືກັບຄັ້ງກ່ອນ. ຕັ້ງແຕ່ທີ່ພຣະເຢຊູໄດ້ຈາກໄປ, ສາວົກຜູ້ທີ່ຕິດຕາມພຣະອົງ ພ້ອມທັງໄພ່ພົນທຸກຄົນທີ່ໄດ້ຮັບຄວາມລອດພົ້ນໃນພຣະນາມຂອງພຣະອົງກໍ່ໄດ້ພາກັນສະແຫວງຫາ ແລະ ລໍຄອຍພຣະອົງຢ່າງສິ້ນຫວັງ. ທຸກຄົນທີ່ໄດ້ຮັບຄວາມລອດພົ້ນຈາກພຣະກະລຸນາຂອງພຣະເຢຊູຄຣິດໃນລະຫວ່າງຍຸກແຫ່ງພຣະຄຸນກໍ່ປາດຖະໜາຫາມື້ແຫ່ງຄວາມປິຕິຍິນດີໃນຍຸກສຸດທ້າຍ ເມື່ອພຣະຜູ້ຊ່ວຍໃຫ້ລອດພົ້ນຈະລົງມາເທິງກ້ອນເມກສີຂາວ ເພື່ອປາກົດຕົວຕໍ່ໜ້າທຸກຄົນ. ແນ່ນອນ ສິ່ງນີ້ຍັງແມ່ນຄວາມປາດຖະໜາລວມກັນຂອງທຸກຄົນທີ່ຍອມຮັບພຣະນາມຂອງພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນໃນມື້ນີ້. ທຸກຄົນໃນຈັກກະວານທີ່ຮູ້ຈັກຄວາມລອດພົ້ນຂອງພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນໄດ້ລໍຄອຍຢ່າງສິ້ນຫວັງໃຫ້ພຣະເຢຊູຄຣິດມາເຖິງຢ່າງກະທັນຫັນ ເພື່ອເຮັດສຳເລັດສິ່ງທີ່ພຣະເຢຊູໄດ້ກ່າວໄວ້ໃນຂະນະທີ່ຢູ່ເທິງໂລກ: "ເຮົາຈະມາຄືກັນກັບຕອນທີ່ເຮົາຈາກໄປ". ມະນຸດເຊື່ອວ່າ ຫຼັງຈາກການຖືກຄຶງເທິງໄມ້ກາງແຂນ ແລະ ການຄືນຊີບ ພຣະເຢຊູໄດ້ກັບຄືນໄປສູ່ສະຫວັນເທິງກ້ອນເມກສີຂາວ ເພື່ອຮັບຕຳແໜ່ງຂອງພຣະອົງໃນມືເບື້ອງຂວາຂອງອົງຊົງສູງສຸດ. ໃນລັກສະນະດຽວກັນ, ພຣະເຢຊູຈະລົງມາເທິງກ້ອນເມກສີຂາວອີກຄັ້ງ (ກ້ອນເມກນີ້ໝາຍເຖິງກ້ອນເມກທີ່ພຣະເຢຊູຂີ່ໃນເວລາທີ່ພຣະອົງກັບຄືນໄປສະຫວັນ) ທ່າມກາງຄົນທີ່ຄອງຄອຍພຣະອົງຢ່າງສິ້ນຫວັງເປັນເວລາຫຼາຍພັນປີ ແລະ ພຣະອົງຈະມີພາບລັກ ແລະ ໃສ່ເຄື່ອງນຸ່ງຂອງຄົນຢິວ. ຫຼັງຈາກທີ່ປາກົດຕໍ່ມະນຸດແລ້ວ, ພຣະອົງຈະປະທານອາຫານໃຫ້ແກ່ພວກເຂົາ ແລະ ເຮັດໃຫ້ນໍ້າແຫ່ງຊີວິດໄຫຼອອກມາສຳລັບພວກເຂົາ ແລະ ຈະໃຊ້ຊີວິດໃນທ່າມກາງມະນຸດຢ່າງເຕັມໄປດ້ວຍຄວາມກະລຸນາ ແລະ ເຕັມໄປດ້ວຍຄວາມຮັກ, ຊີວິດຊີວາ ແລະ ຄວາມຈິງ. ແນວຄິດທັງໝົດນັ້ນແມ່ນສິ່ງທີ່

ຜູ້ຄົນເຊື່ອ. ແຕ່ພຣະເຢຊູຜູ້ຊ່ວຍໃຫ້ລອດພົ້ນບໍ່ໄດ້ເຮັດແບບນີ້; ພຣະອົງເຮັດກົງກັນຂ້າມກັບສິ່ງທີ່ມະນຸດເຂົ້າໃຈ. ພຣະອົງບໍ່ໄດ້ມາຢູ່ທ່າມກາງຜູ້ຄົນທີ່ຄອງຄອຍການກັບມາຂອງພຣະອົງ ແລະ ພຣະອົງບໍ່ໄດ້ປາກົດຕໍ່ທຸກຄົນໃນຂະນະທີ່ກຳລັງຂີ່ກ້ອນເມກສີຂາວ. ພຣະອົງໄດ້ລົງມາແລ້ວ ແຕ່ມະນຸດບໍ່ຮູ້ຈັກ ແລະ ຍັງບໍ່ຮູ້. ມະນຸດພຽງແຕ່ລໍຖ້າພຣະອົງຢ່າງບໍ່ມີຈຸດໝາຍ ໂດຍບໍ່ຮູ້ວ່າພຣະອົງໄດ້ລົງມາເທິງ "ກ້ອນເມກສີຂາວ" ແລ້ວ (ກ້ອນເມກທີ່ເປັນພຣະວິນຍານຂອງພຣະອົງ, ພຣະທຳຂອງພຣະອົງ ແລະ ອຸປະນິໄສທັງໝົດຂອງພຣະອົງ ແລະ ທຸກສິ່ງທີ່ພຣະອົງເປັນ) ແລະ ໃນຕອນນີ້ ພຣະອົງຢູ່ທ່າມກາງກຸ່ມຜູ້ຊະນະທີ່ພຣະອົງຈະສ້າງຂຶ້ນໃນລະຫວ່າງຍຸກສຸດທ້າຍ. ມະນຸດບໍ່ຮູ້ສິ່ງນີ້: ເຖິງແມ່ນວ່າພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ບໍລິສຸດຈະມີຄວາມເມດຕາ ແລະ ຄວາມຮັກຕໍ່ມະນຸດກໍ່ຕາມ, ພຣະອົງຈະສາມາດດຳເນີນພາລະກິດໃນ "ພຣະວິຫານ" ເຫຼົ່ານັ້ນທີ່ເຕັມໄປດ້ວຍວິນຍານທີ່ສົກກະປົກ ແລະ ບໍ່ບໍລິສຸດໄດ້ແນວໃດ? ເຖິງແມ່ນວ່າມະນຸດໄດ້ລໍຖ້າການລົງມາຂອງພຣະອົງ, ພຣະອົງຈະສາມາດປາກົດຕໍ່ຄົນທີ່ກິນເນື້ອໜັງຂອງສິ່ງທີ່ບໍ່ຊອບທຳ, ດື່ມເລືອດຂອງສິ່ງທີ່ບໍ່ຊອບທຳ ແລະ ນຸ່ງເສື້ອຜ້າຂອງຄົນທີ່ບໍ່ຊອບທຳ, ຄົນທີ່ເຊື່ອໃນພຣະອົງ ແຕ່ບໍ່ຮູ້ຈັກພຣະອົງ ແລະ ຜູ້ທີ່ຂົ່ມເຫັງພຣະອົງຢ່າງຕໍ່ເນື່ອງໄດ້ແນວໃດ? ມະນຸດຮູ້ແຕ່ວ່າພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນເຕັມປ່ຽມໄປດ້ວຍຄວາມຮັກ ແລະ ເຕັມລົ້ນດ້ວຍຄວາມສົງສານ ແລະ ພຣະອົງເປັນເຄື່ອງບູຊາແທນຄວາມຜິດບາບທີ່ເຕັມໄປດ້ວຍການໄຖ່ບາບ. ເຖິງຢ່າງໃດກໍ່ຕາມ, ມະນຸດບໍ່ຮູ້ວ່າພຣະອົງເອງເປັນພຣະເຈົ້າ ຜູ້ທີ່ເຕັມປ່ຽມໄປດ້ວຍຄວາມຊອບທຳ, ຄວາມສະຫງ່າຜ່າເຜີຍ, ຄວາມໂກດຮ້າຍ ແລະ ການພິພາກສາ, ມີລິດອຳນາດ ແລະ ເຕັມໄປດ້ວຍກຽດສັກສີ. ສະນັ້ນ ເຖິງແມ່ນວ່າມະນຸດຈະປາດຖະໜາ ແລະ ລໍຄອຍການກັບມາຂອງພຣະຜູ້ໄຖ່ບາບຢ່າງຈິງໃຈ ແລະ ເຖິງແມ່ນວ່າຄຳອະທິຖານຂອງພວກເຂົາຈະສັ່ນສະເທືອນເຖິງ "ສະຫວັນ", ພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນກໍ່ຈະບໍ່ປາກົດຕົວຕໍ່ຄົນທີ່ເຊື່ອໃນພຣະອົງແຕ່ບໍ່ຮູ້ຈັກພຣະອົງ.

"ພຣະເຢໂຮວາ" ແມ່ນພຣະນາມທີ່ເຮົາໃຊ້ໃນລະຫວ່າງພາລະກິດຂອງເຮົາໃນອິດສະຣາເອນ ແລະ ມັນໝາຍເຖິງພຣະເຈົ້າຂອງຄົນອິດສະຣາເອນ (ຄົນທີ່ຖືກເລືອກຂອງພຣະເຈົ້າ) ຜູ້ທີ່ສາມາດມີຄວາມສົງສານຕໍ່ມະນຸດ, ສາບແຊ່ງມະນຸດ ແລະ ນຳທາງຊີວິດຂອງມະນຸດໄດ້; ພຣະເຈົ້າທີ່ມີລິດອຳນາດຍິ່ງໃຫຍ່ ແລະ ເຕັມໄປດ້ວຍສະຕິປັນຍາ. "ພຣະເຢຊູ" ຄືເອມະນູເອນ ເຊິ່ງໝາຍເຖິງເຄື່ອງຖວາຍແທນຄວາມຜິດບາບທີ່ເຕັມໄປດ້ວຍຄວາມຮັກ, ເຕັມໄປດ້ວຍຄວາມເມດຕາ ແລະ ໄຖ່ບາບໃຫ້ມະນຸດ. ພຣະອົງປະຕິບັດພາລະກິດໃນຍຸກແຫ່ງພຣະຄຸນ ແລະ ພຣະອົງເປັນຕົວແທນໃຫ້ແກ່ຍຸກແຫ່ງພຣະຄຸນ ແລະ ພຽງແຕ່ສາມາດເປັນຕົວແທນໃຫ້ສ່ວນໜຶ່ງໃນພາລະກິດແຫ່ງແຜນການຄຸ້ມຄອງ. ນັ້ນໝາຍຄວາມວ່າ ມີພຽງແຕ່ພຣະເຢໂຮວາເທົ່ານັ້ນທີ່ເປັນພຣະເຈົ້າຂອງຄົນທີ່ຖືກເລືອກຂອງອິດສະຣາເອນ, ພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ພຣະເຈົ້າຂອງຢາໂຄບ, ພຣະເຈົ້າຂອງໂມເຊ ແລະ ພຣະເຈົ້າຂອງຄົນອິດສະຣາເອນທັງໝົດ. ສະນັ້ນ ໃນຍຸກປັດຈຸບັນ ຄົນອິດສະຣາເອນທຸກຄົນນອກຈາກຄົນຢິວແລ້ວ ກໍ່ນະມັດສະການພຣະເຢໂຮວາ. ພວກເຂົາຖວາຍບູຊາແກ່ພຣະອົງເທິງແທ່ນບູຊາ ແລະ ຮັບໃຊ້ພຣະອົງໃນພຣະວິຫານໂດຍໃສ່ເສື້ອຄຸມຂອງປະໂລຫິດ. ສິ່ງທີ່ພວກເຂົາຄາດຫວັງແມ່ນການ

ປາກົດຕົວອີກຄັ້ງຂອງພຣະເຢໂຮວາ. ມີພຽງແຕ່ພຣະເຢຊູເທົ່ານັ້ນທີ່ເປັນຜູ້ໄຖ່ບາບຂອງມະນຸດຊາດ ແລະ ພຣະອົງຄືເຄື່ອງຖວາຍແທນຄວາມຜິດບາບທີ່ໄຖ່ມະນຸດຊາດຈາກຄວາມຜິດບາບ. ນັ້ນໝາຍຄວາມວ່າ ພຣະນາມຂອງພຣະເຢຊູແມ່ນມາຈາກຍຸກແຫ່ງພຣະຄຸນ ແລະ ເກີດຂຶ້ນເນື່ອງຈາກພາລະກິດແຫ່ງການໄຖ່ບາບໃນຍຸກແຫ່ງພຣະຄຸນ. ພຣະນາມຂອງພຣະເຢຊູເກີດຂຶ້ນເພື່ອເຮັດໃຫ້ຜູ້ຄົນໃນຍຸກແຫ່ງພຣະຄຸນໄດ້ເກີດໃໝ່ ແລະ ໄດ້ຮັບຄວາມລອດພົ້ນ ແລະ ເປັນພຣະນາມໂດຍສະເພາະສຳລັບການໄຖ່ບາບຂອງມະນຸດຊາດທັງປວງ. ສະນັ້ນ ພຣະນາມຂອງພຣະເຢຊູຈຶ່ງເປັນຕົວແທນໃຫ້ແກ່ພາລະກິດແຫ່ງການໄຖ່ບາບ ແລະ ສະແດງເຖິງຍຸກແຫ່ງພຣະຄຸນ. ພຣະນາມຂອງພຣະເຢໂຮວາແມ່ນພຣະນາມສະເພາະສຳລັບຄົນອິດສະຣາເອນຜູ້ທີ່ດຳເນີນຊີວິດພາຍໃຕ້ພຣະບັນຍັດ. ໃນແຕ່ລະຍຸກ ແລະ ແຕ່ລະຂັ້ນຕອນຂອງພາລະກິດນັ້ນ, ພຣະນາມຂອງເຮົາບໍ່ໄດ້ໄຮ້ເຫດຜົນ ແຕ່ມີຄວາມໝາຍໃນການເປັນຕົວແທນ: ພຣະນາມແຕ່ລະນາມເປັນຕົວແທນໃຫ້ແກ່ຍຸກໜຶ່ງ. "ພຣະເຢໂຮວາ" ເປັນຕົວແທນໃຫ້ແກ່ຍຸກແຫ່ງພຣະບັນຍັດ ແລະ ເປັນນາມມະຍົດທີ່ຄົນໃນອິດສະຣາເອນເອີ້ນຫາພຣະເຈົ້າທີ່ພວກເຂົານະມັດສະການ. "ພຣະເຢຊູ" ເປັນຕົວແທນໃຫ້ແກ່ຍຸກແຫ່ງພຣະຄຸນ ແລະ ເປັນພຣະນາມຂອງພຣະເຈົ້າຂອງທຸກຄົນທີ່ໄດ້ຮັບການໄຖ່ບາບໃນຍຸກແຫ່ງພຣະຄຸນ. ຖ້າມະນຸດຍັງປາຖະໜາການມາເຖິງຂອງພຣະເຢຊູຜູ້ຊ່ວຍໃຫ້ລອດພົ້ນໃນລະຫວ່າງຍຸກສຸດທ້າຍ ແລະ ຍັງຄາດຫວັງໃຫ້ພຣະອົງກັບມາໃນລັກສະນະທີ່ພຣະອົງບັງເກີດໃນແຂວງຢູດາຍ, ແລ້ວແຜນການຄຸ້ມຄອງຫົກພັນປີທັງໝົດຈະຢຸດຢູ່ໃນຍຸກແຫ່ງການໄຖ່ບາບ ແລະ ບໍ່ສາມາດສືບຕໍ່ກ້າວໄປຂ້າງໜ້າໄດ້. ຍິ່ງໄປກວ່ານັ້ນ, ຍຸກສຸດທ້າຍຈະບໍ່ມີວັນມາເຖິງ ແລະ ຍຸກດັ່ງກ່າວຈະບໍ່ມີສິ້ນສຸດລົງຈັກເທື່ອ. ນີ້ເປັນເພາະວ່າພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນແມ່ນສຳລັບການໄຖ່ບາບ ແລະ ຄວາມລອດພົ້ນຂອງມະນຸດເທົ່ານັ້ນ. ເຮົາໃຊ້ຊື່ພຣະເຢຊູເພື່ອເຫັນແກ່ຄົນບາບທຸກຄົນໃນຍຸກແຫ່ງພຣະຄຸນເທົ່ານັ້ນ, ແຕ່ມັນບໍ່ແມ່ນນາມທີ່ເຮົາຈະນຳເອົາມະນຸດຊາດທັງປວງໄປສູ່ຈຸດສິ້ນສຸດ. ເຖິງແມ່ນວ່າພຣະເຢໂຮວາ, ພຣະເຢຊູ ແລະ ພຣະເມຊີອາລ້ວນແລ້ວແຕ່ເປັນຕົວແທນໃຫ້ແກ່ພຣະວິນຍານຂອງເຮົາ, ນາມເຫຼົ່ານີ້ພຽງແຕ່ສະແດງເຖິງຍຸກທີ່ແຕກຕ່າງກັນໃນແຜນການຄຸ້ມຄອງຂອງເຮົາ ແລະ ບໍ່ແມ່ນຕົວແທນໃຫ້ແກ່ເຮົາຢ່າງສົມບູນ. ນາມທີ່ຜູ້ຄົນເທິງໂລກຮຽກເອີ້ນເຮົາກໍ່ບໍ່ສາມາດອະທິບາຍເຖິງອຸປະນິໄສທັງໝົດຂອງເຮົາ ແລະ ທຸກສິ່ງທີ່ເຮົາເປັນ. ພວກມັນພຽງແຕ່ເປັນນາມທີ່ແຕກຕ່າງກັນທີ່ມະນຸດເອີ້ນເຮົາໃນຍຸກທີ່ແຕກຕ່າງກັນເທົ່ານັ້ນ. ສະນັ້ນ ເມື່ອຍຸກສຸດທ້າຍ ນັ້ນກໍ່ຄືຍຸກແຫ່ງມື້ສຸດທ້າຍມາເຖິງ ນາມຂອງເຮົາຈະປ່ຽນອີກຄັ້ງ. ເຮົາຈະບໍ່ຖືກເອີ້ນວ່າພຣະເຢໂຮວາ ຫຼື ພຣະເຢຊູ, ແຮງໄກທີ່ຈະເປັນພຣະເມຊີອາ, ເຮົາຈະຖືກເອີ້ນວ່າ ພຣະເຈົ້າອົງຊົງລິດທານຸພາບສູງສຸດທີ່ມີລິດອຳນາດ ແລະ ພາຍໃຕ້ນາມໃໝ່ນີ້ ເຮົາຈະນຳເອົາທຸກຍຸກໄປສູ່ຈຸດສິ້ນສຸດ. ຄັ້ງໜຶ່ງ ເຮົາເຄີຍຖືກຮັບຮູ້ວ່າເປັນພຣະເຢໂຮວາ. ຜູ້ຄົນຍັງເອີ້ນເຮົາວ່າພຣະເມຊີອາ ແລະ ຜູ້ຄົນເຄີຍເອີ້ນເຮົາວ່າພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນໃນຄັ້ງໜຶ່ງ ເຊິ່ງເຕັມໄປດ້ວຍຄວາມຮັກ ແລະ ການເຄົາລົບບູຊາ. ເຖິງຢ່າງໃດກໍ່ຕາມ, ມື້ນີ້ເຮົາບໍ່ແມ່ນພຣະເຢໂຮວາ ຫຼື ພຣະເຢຊູທີ່ຜູ້ຄົນເຄີຍຮູ້ຈັກໃນອະດີດຜ່ານມາອີກຕໍ່ໄປ; ເຮົາແມ່ນພຣະເຈົ້າທີ່ກັບຄືນມາໃນຍຸກສຸດທ້າຍ, ພຣະເຈົ້າທີ່ຈະນຳເອົາຍຸກໄປສູ່ຈຸດສິ້ນສຸດ. ເຮົາແມ່ນພຣະເຈົ້າທີ່ລຸກຂຶ້ນ

ຈາກສຸດປາຍແຜ່ນດິນໂລກ ເຊິ່ງເຕັມໄປດ້ວຍອຸປະນິໄສທັງໝົດຂອງເຮົາ ແລະ ເຕັມໄປດ້ວຍສິດອຳນາດ, ກຽດຕິຍົດ ແລະ ສະຫງ່າລາສີ. ຜູ້ຄົນບໍ່ເຄີຍໄດ້ພົວພັນກັບເຮົາ, ບໍ່ເຄີຍຮູ້ຈັກເຮົາ ແລະ ບໍ່ເຄີຍຮູ້ຈັກອຸປະນິໄສຂອງເຮົາ. ນັບຕັ້ງແຕ່ການສ້າງໂລກຈົນມາຮອດມື້ນີ້, ບໍ່ທັນມີຜູ້ໃດເຄີຍເຫັນເຮົາ. ນີ້ແມ່ນພຣະເຈົ້າຜູ້ທີ່ປາກົດຕໍ່ມະນຸດໃນຍຸກສຸດທ້າຍ ແຕ່ລີ້ລັບທ່າມກາງມະນຸດ. ພຣະອົງອາໄສຢູ່ທ່າມກາງມະນຸດຢ່າງແທ້ຈິງ ແລະ ເປັນຈິງຄືກັບດວງອາທິດທີ່ເຜົາໄໝ້ ແລະ ເຕັມປ່ຽມໄປດ້ວຍສິດອຳນາດ. ບໍ່ມີບຸກຄົນ ຫຼື ສິ່ງໃດທີ່ຈະບໍ່ຖືກພິພາກສາໂດຍພຣະທຳຂອງເຮົາ ແລະ ບໍ່ມີບຸກຄົນ ຫຼື ສິ່ງໃດຈະບໍ່ຖືກຊຳລະລ້າງໃຫ້ບໍລິສຸດຜ່ານແປວໄຟທີ່ເຜົາໄໝ້. ໃນທີ່ສຸດແລ້ວ ທຸກຊົນຊາດຈະໄດ້ຮັບພອນເນື່ອງຈາກພຣະທຳຂອງເຮົາ ແລະ ຍັງຈະຖືກທຳລາຍໃຫ້ແຫຼກລະອຽດດ້ວຍພຣະທຳຂອງເຮົາ. ດ້ວຍວິທີນີ້, ທຸກຄົນໃນລະຫວ່າງຍຸກສຸດທ້າຍຈະເຫັນວ່າເຮົາແມ່ນພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ກັບຄືນມາ ແລະ ເຮົາແມ່ນພຣະເຈົ້າອົງຊົງລິດທານຸພາບສູງສຸດທີ່ເອົາຊະນະມະນຸດຊາດທັງປວງ. ແລ້ວທຸກຄົນຈະໄດ້ເຫັນວ່າ ໃນຄັ້ງໜຶ່ງ ເຮົາເຄີຍເປັນເຄື່ອງບູຊາແທນຄວາມຜິດບາບສຳລັບມະນຸດ, ແຕ່ໃນຍຸກສຸດທ້າຍ ເຮົາຍັງຈະກາຍເປັນແປວໄຟຈາກດວງອາທິດທີ່ແຜດເຜົາທຸກສິ່ງຢ່າງ ພ້ອມທັງເປັນດວງອາທິດແຫ່ງຄວາມຊອບທຳທີ່ເປີດເຜີຍທຸກສິ່ງຢ່າງ. ນີ້ແມ່ນພາລະກິດຂອງເຮົາໃນຍຸກສຸດທ້າຍ. ເຮົາໃຊ້ນາມນີ້ ແລະ ມີອຸປະນິໄສນີ້ ເພື່ອໃຫ້ທຸກຄົນສາມາດເຫັນວ່າເຮົາແມ່ນພຣະເຈົ້າທີ່ຊອບທຳ, ເປັນດວງອາທິດທີ່ແຜດເຜົາ, ເປັນແປວໄຟທີ່ເຜົາໄໝ້ ແລະ ເພື່ອໃຫ້ທຸກຄົນນະມັດສະການເຮົາ ຜູ້ທີ່ເປັນພຣະເຈົ້າທີ່ແທ້ຈິງອົງດຽວ ແລະ ເພື່ອໃຫ້ພວກເຂົາເຫັນໃບໜ້າແທ້ຈິງຂອງເຮົາ: ເຮົາບໍ່ໄດ້ເປັນພຽງພຣະເຈົ້າຂອງຄົນອິດສະຣາເອນ ແລະ ເຮົາບໍ່ແມ່ນພຽງແຕ່ຜູ້ໄຖ່ບາບເທົ່ານັ້ນ; ເຮົາເປັນພຣະເຈົ້າຂອງສັບພະສິ່ງທັງປວງໃນສະຫວັນ ແລະ ແຜ່ນດິນໂລກ ແລະ ທະເລ.

ຖ້າພຣະຜູ້ຊ່ວຍໃຫ້ລອດພົ້ນມາເຖິງໃນຍຸກສຸດທ້າຍ ແລະ ຍັງຖືກເອີ້ນວ່າພຣະເຢຊູ ແລະ ບັງເກີດຢູ່ແຂວງຢູດາຍອີກຄັ້ງ ແລະ ດຳເນີນພາລະກິດຂອງພຣະອົງໃນທີ່ນັ້ນ, ແລ້ວສິ່ງນີ້ກໍ່ພິສູດໃຫ້ເຫັນວ່າເຮົາພຽງແຕ່ສ້າງຄົນອິດສະຣາເອນ ແລະ ພຽງແຕ່ໄຖ່ບາບຄົນອິດສະຣາເອນເທົ່ານັ້ນ ແລະ ເຮົາບໍ່ມີຫຍັງກ່ຽວຂ້ອງກັບຄົນຕ່າງຊາດ. ນີ້ຈະບໍ່ຂັດກັບພຣະທຳຂອງເຮົາທີ່ບອກວ່າ "ເຮົາແມ່ນພຣະຜູ້ເປັນເຈົ້າທີ່ສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ສັບພະສິ່ງທັງປວງ" ບໍ? ເຮົາໄດ້ອອກຈາກແຂວງຢູດາຍ ແລະ ເຮັດພາລະກິດຂອງເຮົາທ່າມກາງຄົນຕ່າງຊາດ ເພາະວ່າເຮົາບໍ່ແມ່ນພຽງແຕ່ພຣະເຈົ້າຂອງຄົນອິດສະຣາເອນເທົ່ານັ້ນ ແຕ່ເປັນພຣະເຈົ້າຂອງທຸກສັບພະສິ່ງທັງປວງ. ເຮົາປາກົດຢູ່ທ່າມກາງຄົນຕ່າງຊາດໃນລະຫວ່າງຍຸກສຸດທ້າຍນີ້ ເພາະວ່າເຮົາບໍ່ແມ່ນພຣະເຢໂຮວາ ເຊິ່ງເປັນພຣະເຈົ້າຂອງຄົນອິດສະຣາເອນ, ແຕ່ຍິ່ງໄປກວ່ານັ້ນ ເພາະເຮົາເປັນພຣະຜູ້ສ້າງຂອງທຸກຄົນທີ່ເຮົາເລືອກໃນບັນດາຄົນຕ່າງຊາດ. ເຮົາບໍ່ພຽງແຕ່ສ້າງອິດສະຣາເອນ, ອີຢິບ ແລະ ເລບານອນເທົ່ານັ້ນ, ແຕ່ຍັງສ້າງຊາດອື່ນທັງໝົດທີ່ບໍ່ແມ່ນຊາວຢິວທີ່ຢູ່ນອກອິດສະຣາເອນອີກດ້ວຍ. ດ້ວຍເຫດນີ້, ເຮົາຈຶ່ງແມ່ນພຣະຜູ້ເປັນເຈົ້າຂອງສັບພະສິ່ງທັງປວງ. ເຮົາພຽງແຕ່ໃຊ້ອິດສະຣາເອນເປັນຈຸດເລີ່ມຕົ້ນສຳລັບພາລະກິດຂອງເຮົາເທົ່ານັ້ນ, ໃຊ້ແຂວງຢູດາຍ ແລະ ກາລີລີເປັນຖານທີ່ໝັ້ນທີ່ເຮົາຈະນຳເອົາຍຸກທັງໝົດນີ້ໄປສູ່ຈຸດສິ້ນສຸດ. ເຮົາໄດ້ດຳເນີນພາລະກິດສອງ

ຂັ້ນຕອນໃນອິດສະຣາເອນ (ພາລະກິດສອງຂັ້ນຕອນເຫຼົ່ານີ້ແມ່ນຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນ) ແລະ ເຮົາໄດ້ດຳເນີນພາລະກິດອີກຂັ້ນຕອນ (ຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງລາຊະອານາຈັກ) ທີ່ວດິນແດນນອກອິດສະຣາເອນ. ໃນບັນດາຊາດທີ່ບໍ່ແມ່ນຊາວຢິວ, ເຮົາຈະດຳເນີນພາລະກິດແຫ່ງການເອົາຊະນະ ແລະ ດ້ວຍເຫດນັ້ນກໍ່ສິ້ນສຸດຍຸກ. ຖ້າມະນຸດຍັງເອີ້ນເຮົາວ່າພຣະເຢຊູຄຣິດ ແຕ່ບໍ່ຮູ້ວ່າເຮົາໄດ້ເລີ່ມຍຸກໃໝ່ແລ້ວໃນລະຫວ່າງຍຸກສຸດທ້າຍນີ້ ແລະ ໄດ້ເລີ່ມພາລະກິດໃໝ່ແລ້ວ ແລະ ຖ້າມະນຸດຍັງສືບຕໍ່ລໍຄອຍການມາເຖິງຂອງພຣະເຢຊູພຣະຜູ້ຊ່ວຍໃຫ້ລອດໂດຍບໍ່ຮູ້ສຶກ, ແລ້ວເຮົາກໍ່ຈະຖືວ່າຄົນແບບນີ້ເປັນຄົນທີ່ບໍ່ເຊື່ອໃນຕົວເຮົາ; ພວກເຂົາແມ່ນຄົນທີ່ບໍ່ຮູ້ຈັກເຮົາ ແລະ ຄວາມເຊື່ອຂອງພວກເຂົາໃນຕົວເຮົາກໍ່ເປັນຄວາມເຊື່ອທີ່ບໍ່ແທ້ຈິງ. ຄົນດັ່ງກ່າວຈະສາມາດເຫັນການມາເຖິງຂອງພຣະເຢຊູພຣະຜູ້ຊ່ວຍໃຫ້ລອດພົ້ນຈາກສະຫວັນບໍ? ສິ່ງທີ່ພວກເຂົາລໍຄອຍບໍ່ແມ່ນການມາເຖິງຂອງເຮົາ ແຕ່ການມາເຖິງຂອງກະສັດຂອງຄົນຢິວ. ພວກເຂົາບໍ່ໄດ້ປາດຖະໜາໃຫ້ເຮົາທຳລາຍລ້າງໂລກເກົ່າທີ່ບໍ່ບໍລິສຸດນີ້ຂອງເຮົາ ແຕ່ກົງກັນຂ້າມ ພວກເຂົາປາດຖະໜາການກັບມາຄັ້ງທີສອງຂອງພຣະເຢຊູ ເຊິ່ງພວກເຂົາຈະໄດ້ຮັບການໄຖ່ບາບ. ພວກເຂົາລໍຄອຍໃຫ້ພຣະເຢຊູກັບມາໄຖ່ບາບມະນຸດຊາດທັງປວງອີກຄັ້ງຈາກດິນແດນທີ່ສົກກະປົກ ແລະ ບໍ່ຊອບທຳນີ້. ຄົນດັ່ງກ່າວຈະສາມາດກາຍເປັນຄົນທີ່ສຳເລັດພາລະກິດຂອງເຮົາໃນຍຸກສຸດທ້າຍໄດ້ແນວໃດ? ຄວາມປາດຖະໜາຂອງມະນຸດບໍ່ສາມາດບັນລຸຄວາມປາດຖະໜາຂອງເຮົາ ຫຼື ສຳເລັດຕາມພາລະກິດຂອງເຮົາ ຍ້ອນມະນຸດພຽງແຕ່ຊື່ນຊົມ ຫຼື ສັນລະເສີນພາລະກິດທີ່ເຮົາໄດ້ກະທຳໃນເມື່ອກ່ອນເທົ່ານັ້ນ ແລະ ບໍ່ຮູ້ວ່າເຮົາແມ່ນພຣະເຈົ້າອົງໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າຈັກເທື່ອ. ມະນຸດພຽງແຕ່ຮູ້ວ່າເຮົາແມ່ນພຣະເຢໂຮວາ ແລະ ພຣະເຢຊູ ແລະ ບໍ່ຮູ້ເລີຍວ່າເຮົາແມ່ນພຣະເຈົ້າແຫ່ງຍຸກສຸດທ້າຍ ຜູ້ທີ່ຈະນຳມະນຸດຊາດໄປສູ່ຈຸດສິ້ນສຸດ. ທັງໝົດທີ່ມະນຸດປາດຖະໜາ ແລະ ຮູ້ຈັກແມ່ນມາຈາກແນວຄວາມຄິດຂອງພວກເຂົາເອງ ແລະ ເປັນພຽງແຕ່ສິ່ງທີ່ມະນຸດສາມາດເຫັນໄດ້ດ້ວຍຕາຂອງພວກເຂົາເອງເທົ່ານັ້ນ. ມັນບໍ່ສອດຄ່ອງກັບພາລະກິດທີ່ເຮົາກະທຳ, ແຕ່ຂັດແຍ້ງກັບພາລະກິດນັ້ນ. ຖ້າພາລະກິດຂອງເຮົາຖືກດຳເນີນອີງຕາມແນວຄິດຂອງມະນຸດ, ແລ້ວມັນຈະສິ້ນສຸດເມື່ອໃດ? ມະນຸດຈະໄປສູ່ບ່ອນພັກເຊົາໄດ້ເມື່ອໃດ? ແລ້ວເຮົາຈະສາມາດເຂົ້າສູ່ມື້ທີເຈັດ ເຊິ່ງເປັນວັນພັກໄດ້ແນວໃດ? ເຮົາດຳເນີນພາລະກິດຕາມແຜນການຂອງເຮົາ ແລະ ຕາມຈຸດປະສົງຂອງເຮົາ, ບໍ່ແມ່ນຕາມເຈດຕະນາຂອງມະນຸດ.

# ພາລະກິດເຜີຍແຜ່ຄຳສອນຂອງພຣະເຈົ້າເປັນພາລະກິດຊ່ວຍໃຫ້ມະນຸດລອດພົ້ນ

ມະນຸດທຸກຄົນຈຳເປັນຕ້ອງເຂົ້າໃຈຈຸດປະສົງຂອງພາລະກິດຂອງເຮົາຢູ່ໃນໂລກນີ້, ນັ້ນແມ່ນພາລະກິດທີ່ເຮົາປາຖະໜາທີ່ຈະໄດ້ຮັບສູງສຸດ ແລະ ລະດັບໃດທີ່ເຮົາຕ້ອງບັນລຸໄດ້ໃນພາລະກິດນີ້ກ່ອນທີ່ພາລະກິດຈະສຳເລັດໄດ້. ຫຼັງຈາກໄດ້ກ້າວມາກັບເຮົາຈົນມາຮອດມື້ນີ້, ຖ້າມະນຸດຍັງບໍ່ເຂົ້າໃຈວ່າພາລະກິດຂອງເຮົາແມ່ນກ່ຽວກັບຫຍັງ, ນັ້ນໝາຍຄວາມວ່າພວກເຂົາແມ່ນໄດ້ຕິດຕາມເຮົາໂດຍໄຮ້ປະໂຫຍດເລີຍບໍ? ຖ້າຜູ້ຄົນຕິດຕາມເຮົາ, ພວກເຂົາຄວນຮູ້ຈຸດປະສົງຂອງເຮົາ. ເຮົາໄດ້ດຳເນີນພາລະກິດໃນໂລກມະນຸດເປັນເວລາຫຼາຍພັນປີມາແລ້ວ ແລະ ມາຮອດມື້ນີ້ ເຮົາຍັງດຳເນີນພາລະກິດຂອງເຮົາຢູ່. ເຖິງແມ່ນວ່າພາລະກິດຂອງເຮົາຈະມີຫຼາຍໂຄງການກໍ່ຕາມ, ແຕ່ຈຸດປະສົງຂອງພາລະກິດນີ້ຍັງຄົງບໍ່ປ່ຽນແປງ. ເຖິງແມ່ນວ່າເຮົາຈະມາພ້ອມກັບການພິພາກສາ ແລະ ການລົງໂທດຕໍ່ກັບມະນຸດກໍ່ຕາມ, ຍົກຕົວຢ່າງ, ສິ່ງທີ່ເຮົາເຮັດແມ່ນເພື່ອປະໂຫຍດໃນການຊ່ວຍໃຫ້ມະນຸດລອດພົ້ນ ແລະ ເພື່ອປະໂຫຍດໃນການເຜີຍແຜ່ພຣະກິດຕິຄຸນຂອງເຮົາໃຫ້ດີຂຶ້ນກວ່າເກົ່າ ແລະ ການເພີ່ມຂະຫຍາຍພາລະກິດຂອງເຮົາໃນບັນດາຊາດທີ່ບໍ່ແມ່ນຊາວຢິວຫລັງຈາກມະນຸດໄດ້ຮັບການສ້າງໃຫ້ສົມບູນແລ້ວ. ສະນັ້ນໃນມື້ນີ້, ໃນເວລາທີ່ຫຼາຍໆຄົນຈົມເລິກໄປກັບຄວາມສິ້ນຫວັງ, ເຮົາຍັງສືບຕໍ່ພາລະກິດຂອງເຮົາ, ເຮົາສືບຕໍ່ວຽກທີ່ເຮົາຕ້ອງເຮັດເພື່ອພິພາກສາ ແລະ ລົງໂທດມະນຸດ. ເຖິງແມ່ນວ່າຕາມຄວາມຈິງແລ້ວມະນຸດແມ່ນເບື່ອໜ່າຍໃນສິ່ງທີ່ເຮົາກ່າວ ແລະ ມະນຸດກໍບໍ່ມີຄວາມຕ້ອງການທີ່ຈະສົນໃຈໃນພາລະກິດຂອງເຮົາ, ເຮົາກໍຍັງສືບຕໍ່ປະຕິບັດໜ້າທີ່ຂອງເຮົາຕໍ່ໄປ ເພາະວ່າຈຸດປະສົງໃນພາລະກິດຂອງເຮົາຍັງຄົງບໍ່ປ່ຽນແປງ ແລະ ແຜນການເບື້ອງຕົ້ນຂອງເຮົາຈະບໍ່ຖືກທຳລາຍ. ພາລະກິດໃນການພິພາກສາຂອງເຮົາແມ່ນເພື່ອເຮັດໃຫ້ມະນຸດເຊື່ອຟັງເຮົາ ແລະ ໃນການລົງໂທດຂອງເຮົາແມ່ນເພື່ອເຮັດໃຫ້ມະນຸດປ່ຽນແປງຢ່າງມີປະສິດທິຜົນຫຼາຍກວ່າເກົ່າ. ເຖິງແມ່ນວ່າສິ່ງທີ່ເຮົາເຮັດແມ່ນເພື່ອປະໂຫຍດແຫ່ງການຄຸ້ມຄອງຂອງເຮົາ, ເຮົາບໍ່ເຄີຍເຮັດສິ່ງໃດທີ່ບໍ່ມີຜົນປະໂຫຍດຕໍ່ມະນຸດເລີຍ ເພາະວ່າເຮົາຕ້ອງການເຮັດໃຫ້ທຸກຊາດຢູ່ນອກດິນແດນອິດສະຣາເອນເຊື່ອຟັງຄືກັນກັບຊາວຢິວ ແລະ ເພື່ອເຮັດໃຫ້ພວກເຂົາກາຍເປັນມະນຸດທີ່ແທ້ຈິງ ແລະ ເພື່ອໃຫ້ເຮົາມີຖານທີ່ໝັ້ນຢູ່ໃນດິນແດນນອກອິດສະຣາເອນ. ນີ້ແມ່ນການຄຸ້ມຄອງຂອງເຮົາ. ມັນແມ່ນພາລະກິດທີ່ເຮົາກຳລັງພະຍາຍາມບັນລຸຜົນຢູ່ໃນບັນດາຊາດທີ່ບໍ່ແມ່ນຊາວຢິວ. ແມ່ນແຕ່ໃນຕອນນີ້, ຫຼາຍໆຄົນຍັງບໍ່ເຂົ້າໃຈການຄຸ້ມຄອງຂອງເຮົາ, ເພາະວ່າພວກເຂົາບໍ່ສົນໃຈໃນສິ່ງເຫຼົ່ານີ້ ແລະ ສົນໃຈແຕ່ອະນາຄົດ ແລະ ເປົ້າໝາຍຂອງເຂົາເຈົ້າເອງ. ບໍ່ວ່າເຮົາຈະເວົ້າຫຍັງ, ພວກເຂົາກໍຍັງບໍ່ເອົາໃຈໃສ່ຕໍ່ກັບພາລະກິດທີ່ເຮົາເຮັດ, ແຕ່ສຸມໃສ່ແຕ່ເປົ້າໝາຍຂອງເຂົາເຈົ້າໃນມື້ອື່ນ. ຖ້າສິ່ງຕ່າງໆຍັງດຳເນີນໄປໃນແບບນີ້, ພາລະກິດຂອງເຮົາຈະຂະຫຍາຍອອກໄປໄດ້ແນວໃດ? ຄຳສອນຂອງເຮົາຈະເຜີຍແຜ່ໄປທົ່ວໂລກໄດ້ແນວໃດ? ພວກເຈົ້າຄວນຮູ້ວ່າ, ເມື່ອພາລະກິດຂອງເຮົາໄດ້ແຜ່ກະຈາຍອອກໄປແລ້ວ, ເຮົາຈະເຮັດໃຫ້ພວກເຈົ້າແຕກກະຈັດກະຈາຍ ແລະ ເຮົາຈະລົງໂທດພວກເຈົ້າ

ເໝືອນດັ່ງທີ່ພຣະເຢໂຮວາລົງໂທດແຕ່ລະຊົນເຜົ່າໃນດິນແດນອິດສະຣາເອນ. ທັງໝົດນີ້ຈະຖືກເຮັດເພື່ອແຜ່ກະຈາຍຄຳສອນຂອງເຮົາໄປທົ່ວໂລກ ເພື່ອວ່າພາລະກິດຂອງເຮົາອາດຂະຫຍາຍໄປເຖິງຊາດທີ່ບໍ່ແມ່ນຊາວຢິວ, ເພື່ອໃຫ້ຊື່ສຽງຂອງເຮົາໄດ້ຮັບການແຜ່ຂະຫຍາຍຜ່ານທັງຜູ້ໃຫຍ່ ແລະ ເດັກນ້ອຍ ແລະ ເພື່ອໃຫ້ຊື່ສຽງອັນບໍລິສຸດຂອງເຮົາໄດ້ຮັບການຍ້ອງຍໍສັນລະເສີນຈາກປາກຜູ້ຄົນໃນທຸກຊົນຊາດຊົນເຜົ່າ. ເພື່ອວ່າໃນຍຸກສຸດທ້າຍນີ້, ຊື່ສຽງຂອງເຮົາຈະໄດ້ຮັບການຂະຫຍາຍໃນບັນດາຊາດທີ່ບໍ່ແມ່ນຊາວຢິວ, ເຮັດໃຫ້ຜູ້ທີ່ບໍ່ແມ່ນຊາວຢິວເບິ່ງເຫັນການກະທຳຂອງເຮົາ, ເພື່ອໃຫ້ພວກເຂົາເອີ້ນເຮົາວ່າອົງຊົງລິດທານຸພາບສູງສຸດ ອີງຕາມການກະທຳຂອງເຮົາ ແລະ ເຮັດໃຫ້ຄຳເວົ້າຂອງເຮົາເກີດຂຶ້ນເປັນຈິງໃນບໍ່ຊ້າ. ເຮົາຈະເຮັດໃຫ້ມະນຸດທຸກຄົນຮູ້ວ່າເຮົາບໍ່ພຽງແຕ່ແມ່ນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ, ແຕ່ຍັງແມ່ນພຣະເຈົ້າຂອງທຸກຊາດທີ່ບໍ່ແມ່ນຊາວຢິວຣວມທັງຜູ້ທີ່ເຮົາໄດ້ສາບແຊ່ງມາແລ້ວ. ເຮົາຈະໃຫ້ທຸກຄົນເຫັນວ່າ ເຮົາແມ່ນພຣະເຈົ້າແຫ່ງການນິລະມິດສ້າງທັງໝົດ. ນີ້ແມ່ນພາລະກິດທີ່ຍິ່ງໃຫຍ່ທີ່ສຸດຂອງເຮົາ ແລະ ເປັນຈຸດປະສົງຂອງແຜນພາລະກິດຂອງເຮົາສຳລັບຍຸກສຸດທ້າຍ ແລະ ແມ່ນພາລະກິດໜຶ່ງດຽວທີ່ຕ້ອງບັນລຸໄດ້ໃນຍຸກສຸດທ້າຍນີ້.

ສະເພາະໃນມື້ສຸດທ້າຍເທົ່ານັ້ນທີ່ພາລະກິດທີ່ເຮົາໄດ້ມາເປັນເວລາຫຼາຍພັນປີເປີດເຜີຍຕໍ່ກັບມະນຸດທັງໝົດ. ດຽວນີ້ເຮົາໄດ້ເປີດເຜີຍຄວາມລຶກລັບຢ່າງຄົບຖ້ວນກ່ຽວກັບການດຳເນີນພາລະກິດຂອງເຮົາຕໍ່ກັບມະນຸດ ແລະ ມະນຸດໄດ້ຮຽນຮູ້ຈຸດປະສົງຂອງພາລະກິດຂອງເຮົາ ແລະ ຍິ່ງກວ່ານັ້ນຍັງໄດ້ຮັບຄວາມເຂົ້າໃຈກ່ຽວກັບຄວາມລຶກລັບທັງໝົດຂອງເຮົາອີກ. ເຮົາໄດ້ບອກມະນຸດທຸກຢ່າງໄປໝົດແລ້ວກ່ຽວກັບຈຸດໝາຍປາຍທາງທີ່ມະນຸດວິຕົກກັງວົນຢູ່. ເຮົາໄດ້ເປີດເຜີຍຕໍ່ກັບມະນຸດຄວາມລຶກລັບຂອງເຮົາທັງໝົດທີ່ໄດ້ປິດບັງມາເປັນເວລາຫຼາຍກວ່າ 5.900 ປີ. ແລ້ວພຣະເຢໂຮວາແມ່ນໃຜ? ພຣະເມຊີອາແມ່ນໃຜ? ພຣະເຢຊູແມ່ນໃຜ? ພວກເຈົ້າຄວນຮູ້ທັງໝົດນີ້. ພາລະກິດຂອງເຮົາຈະດຳເນີນຕໍ່ໃນຊື່ເຫຼົ່ານີ້. ພວກເຈົ້າເຂົ້າໃຈບໍ? ຄວນເອີ້ນຊື່ອັນບໍລິສຸດຂອງເຮົາແນວໃດ? ຄວນເຜີຍແຜ່ຊື່ຂອງເຮົາແນວໃດຕໍ່ກັບບັນດາຊາດທີ່ເອີ້ນເຮົາຕາມຊື່ແຕ່ລະຊື່ຂອງເຮົາ? ພາລະກິດຂອງເຮົາກຳລັງແຜ່ຂະຫຍາຍອອກໄປ ແລະ ເຮົາຈະເຜີຍແຜ່ຄວາມສົມບູນຂອງມັນໄປສູ່ທຸກຊາດ. ເພາະວ່າພາລະກິດຂອງເຮົາໄດ້ດຳເນີນຢູ່ໃນຕົວພວກເຈົ້າຢູ່ແລ້ວ, ເຮົາຈະລົງໂທດພວກເຈົ້າຄືກັນກັບທີ່ພຣະເຢໂຮວາລົງໂທດຜູ້ຄົນລ້ຽງແກະຂອງເຮືອນເດວິດໃນອິດສະຣາເອນ ເຊິ່ງເຮັດໃຫ້ເຈົ້າກະຈັດກະຈາຍໄປໃນທົ່ວທຸກຊາດ. ສຳລັບໃນຍຸກສຸດທ້າຍນີ້, ເຮົາຈະທຳລາຍທຸກຊາດໃຫ້ກາຍເປັນຊິ້ນສ່ວນນ້ອຍໆ ແລະ ເຮັດໃຫ້ຄົນຂອງພວກເຂົາແຕກກະຈັດກະຈາຍອີກຄັ້ງໃໝ່. ເມື່ອເຮົາກັບມາອີກຄັ້ງ, ຊາດຕ່າງໆກໍຈະໄດ້ຖືກແບ່ງແຍກອອກຕາມເຂດແດນທີ່ກຳນົດໂດຍແປວໄຟເຜົາໄໝ້ຂອງເຮົາ. ໃນເວລານັ້ນ, ເຮົາຈະສະແດງຕົນເອງຕໍ່ກັບມະນຸດອີກຄັ້ງເປັນແສງແດດທີ່ເຜົາໄໝ້, ສະແດງຕົວເຮົາເອງຢ່າງເປີດເຜີຍຕໍ່ກັບພວກເຂົາໃນຮູບຮ່າງຂອງພຣະຜູ້ບໍລິສຸດທີ່ພວກເຂົາບໍ່ເຄີຍເຫັນມາກ່ອນ ໂດຍຍ່າງໃນທ່າມກາງເຊື້ອຊາດທີ່ຫຼາກຫຼາຍ. ຄືກັນກັບເຮົາ, ພຣະເຢໂຮວາກໍ່ເຄີຍຍ່າງຄຽງຂ້າງຊົນເຜົ່າຊາວຢິວມາກ່ອນ. ຕໍ່ນີ້ໄປ, ເຮົາຈະນຳພາມະນຸດໃນການດຳເນີນຊີວິດຂອງພວກເຂົາຢູ່ໃນໂລກ. ທີ່ນັ້ນພວກເຂົາຈະເຫັນລັດສະໝີພາບຂອງເຮົາຢ່າງ

ແນ່ນອນ ແລະ ພວກເຂົາຈະເຫັນເສົາເມກໃນອາກາດທີ່ນຳພາພວກເຂົາໄປສູ່ຊີວິດຂອງພວກເຂົາ. ສຳລັບເຮົາໆຈະປາກົດຕົວໃນສະຖານທີ່ສັກສິດ. ມະນຸດຈະເຫັນເຖິງວັນແຫ່ງຄວາມຍຸຕິທຳຂອງເຮົາ ແລະ ພ້ອມດ້ວຍການສະແດງປະຈັກລັດສະໝີພາບຂອງເຮົາທີ່ຈະເກີດຂຶ້ນເມື່ອເຮົາປົກຄອງໂລກທັງໝົດ ແລະ ນຳເອົາພຣະບຸດທັງຫຼາຍຂອງເຮົາໄປສູ່ລັດສະໝີພາບ. ຢູ່ທຸກບ່ອນໃນໂລກ ມະນຸດຈະກົ້ມຫົວຄຳນັບ ແລະ ສະຖານທີ່ບູຊາຂອງເຮົາຈະຖືກສ້າງຂຶ້ນໃນທ່າມກາງມະນຸດ. ຈາກຜົນຂອງວຽກງານທີ່ເຮົາກຳລັງດຳເນີນໃນທຸກມື້ນີ້, ມະນຸດກໍຈະຮັບໃຊ້ເຮົາໃນພຣະວິຫານ. ແທ່ນບູຊາທີ່ປົກດ້ວຍສິ່ງສົກກະປົກ ແລະ ໜ້າລັງກຽດ, ເຮົາກໍຈະທຳລາຍໃຫ້ແຕກເປັນຫຼາຍຊິ້ນສ່ວນ ແລ້ວສ້າງອັນໃໝ່. ລູກແກະ ແລະ ລູກງົວຈະຖືກກອງໄວ້ເທິງແທ່ນບູຊາ. ເຮົາຈະທຳລາຍພຣະວິຫານໃນທຸກມື້ ແລ້ວສ້າງພຣະວິຫານໃໝ່. ພຣະວິຫານໃນທຸກມື້ນີ້ເຊິ່ງເຕັມໄປດ້ວຍມະນຸດທີ່ໜ້າລັງກຽດຈະຖືກທຳລາຍລົງ ແລະ ພຣະວິຫານທີ່ເຮົາສ້າງຂຶ້ນຈະເຕັມໄປດ້ວຍຜູ້ຮັບໃຊ້ທີ່ຈົງຮັກພັກດີຕໍ່ເຮົາ. ພວກເຂົາຈະຢືນຂຶ້ນອີກຄັ້ງ ແລະ ຮັບໃຊ້ເຮົາເພື່ອປະໂຫຍດແຫ່ງຄວາມລັດສະໝີພາບຂອງພຣະວິຫານຂອງເຮົາ. ພວກເຈົ້າຈະເຫັນມື້ນັ້ນທີ່ເຮົາຈະໄດ້ຮັບຄວາມລັດສະໝີພາບທີ່ຍິ່ງໃຫຍ່ຢ່າງແນ່ນອນ, ແລະ ເຈົ້າຈະເຫັນມື້ທີ່ເຮົາທຳລາຍພຣະວິຫານ ແລະ ສ້າງພຣະວິຫານໃໝ່ຢ່າງແນ່ນອນ. ພ້ອມນັ້ນພວກເຈົ້າຈະເຫັນມື້ທີ່ສະຖານທີ່ບູຊາຂອງເຮົາປາກົດຕົວໃນໂລກຂອງມະນຸດຢ່າງແນ່ນອນ. ເມື່ອເຮົາທຳລາຍພຣະວິຫານ, ເຮົາຈະນຳເອົາແທ່ນບູຊາມາສູ່ໂລກມະນຸດ ດັ່ງທີ່ພວກເຂົາເຫັນການລົງມາຂອງເຮົາ. ຫຼັງຈາກທີ່ເຮົາໄດ້ທຳລາຍທຸກຊາດແລ້ວ, ເຮົາຈະເຕົ້າໂຮມພວກເຂົາຂຶ້ນມາໃໝ່, ຈາກນັ້ນກໍຈະສ້າງພຣະວິຫານຂອງເຮົາ ແລະ ສ້າງແທ່ນບູຊາຂອງເຮົາເພື່ອໃຫ້ທຸກຄົນສາມາດບູຊາເຮົາ, ຮັບໃຊ້ເຮົາໃນພຣະວິຫານຂອງເຮົາ ແລະ ອຸທິດຕົນຢ່າງຊື່ສັດຕໍ່ກັບພາລະກິດຂອງເຮົາໃນບັນດາຊາດທີ່ບໍ່ແມ່ນຊາວຢິວ. ພວກເຂົາຈະເປັນຄືກັບຊາວຢິວໃນທຸກມື້ນີ້, ແຕ່ງຕົວໃນດ້ວຍຊຸດເສື້ອຄຸມຍາວ ແລະ ມົງກຸດ, ພ້ອມດ້ວຍຄວາມລັດສະໝີພາບຂອງເຮົາ ພຣະເຢໂຮວາໃນທ່າມກາງພວກເຂົາ ແລະ ຄວາມເດຊານຸພາບຂອງເຮົາຈະປົກຄຸມທົ່ວພວກເຂົາ ແລະ ຄົງຢູ່ກັບພວກເຂົາ. ພາລະກິດຂອງເຮົາໃນບັນດາຊາດທີ່ບໍ່ແມ່ນຊາວຢິວຈະຖືກດຳເນີນໃນແບບດຽວກັນ. ເໝືອນດັ່ງພາລະກິດຂອງເຮົາໃນອິດສະຣາເອນ, ພາລະກິດຂອງເຮົາໃນບັນດາຊາດທີ່ບໍ່ແມ່ນຊາວຢິວກໍຈະເປັນແບບດຽວກັນນັ້ນ, ເພາະວ່າເຮົາຈະຂະຫຍາຍພາລະກິດຂອງເຮົາໃນອິດສະຣາເອນ ແລະ ເຜີຍແຜ່ໄປສູ່ບັນດາຊາດທີ່ບໍ່ແມ່ນຊາວຢິວ.

ດຽວນີ້ເຖິງເວລາແລ້ວທີ່ພຣະວິນຍານຂອງເຮົາຈະສຳແດງໃນພາລະກິດທີ່ຍິ່ງໃຫຍ່ ແລະ ເຖິງເວລາແລ້ວທີ່ເຮົາຈະເລີ່ມພາລະກິດຂອງເຮົາຢູ່ໃນບັນດາຊາດທີ່ບໍ່ແມ່ນຊາວຢິວ. ຍິ່ງໄປກວ່ານັ້ນ, ມັນເຖິງເວລາແລ້ວທີ່ເຮົາຈະຈັດແບ່ງສິ່ງທີ່ສ້າງຂຶ້ນທັງໝົດໂດຍການຈັດແບ່ງເຂົ້າໃນປະເພດຂອງແຕ່ລະຄົນຕາມລຳດັບເພື່ອໃຫ້ພາລະກິດຂອງເຮົາດຳເນີນໄປໄດ້ໄວ ແລະ ມີປະສິດທິຜົນ. ສະນັ້ນ, ສິ່ງທີ່ເຮົາຮ້ອງຂໍຈາກພວກເຈົ້າຍັງແມ່ນການໃຫ້ເຈົ້າອຸທິດຕົນທັງໝົດຂອງພວກເຈົ້າເພື່ອພາລະກິດຂອງເຮົາຄືເກົ່າ ແລະ ນອກຈາກນັ້ນ ເຈົ້າຄວນເຂົ້າໃຈຢ່າງແຈ່ມແຈ້ງ ແລະ ດຳເນີນວຽກງານທັງໝົດທີ່ເຮົາໄດ້ເຮັດໃນຕົວພວກເຈົ້າ ແລະ ໃຊ້ທຸກເຫື່ອແຮງຂອງເຈົ້າເຂົ້າໃນພາລະກິດຂອງເຮົາເພື່ອໃຫ້ມັນມີປະສິດທິຜົນເພີ່ມຂຶ້ນ.

ນີ້ແມ່ນສິ່ງທີ່ເຈົ້າຕ້ອງເຂົ້າໃຈ. ຢຸດຕໍ່ສູ້ກັນເອງລະຫວ່າງພວກເຈົ້າທັງຫຼາຍ, ຢຸດຊອກທາງໜີ ຫຼື ຊອກຫາຄວາມສະບາຍທາງຮ່າງກາຍ ເຊິ່ງຈະເຮັດໃຫ້ພາລະກິດຂອງເຮົາຊັກຊ້າ ແລະ ທຳລາຍອະນາຄົດອັນສວຍງາມຂອງເຈົ້າ. ແທນທີ່ຈະສາມາດໃຫ້ການປົກປ້ອງແກ່ເຈົ້າ ການເຮັດແບບນັ້ນຈະເປັນການທຳລາຍຕົວເຈົ້າອີກຊໍ້າ. ນັ້ນຈະເປັນຄວາມໂງ່ຈ້າຂອງເຈົ້າເອງແມ່ນບໍ? ສິ່ງທີ່ເຈົ້າກຳລັງມີຄວາມສຸກຢ່າງໂລພາໃນທຸກມື້ນີ້ແມ່ນສິ່ງທີ່ກຳລັງທຳລາຍອະນາຄົດຂອງເຈົ້າ ແລະ ຄວາມເຈັບປວດທີ່ພວກເຈົ້າປະສົບໃນມື້ນີ້ກໍແມ່ນສິ່ງທີ່ກຳລັງປົກປ້ອງເຈົ້າ. ເຈົ້າຕ້ອງຮູ້ຈັກສິ່ງເຫຼົ່ານີ້ຢ່າງຈະແຈ້ງເພື່ອຫຼີກເວັ້ນຈາກການເປັນເຍື່ອຄວາມຫຼອກລວງທີ່ເຮັດໃຫ້ເຈົ້າລອດພົ້ນໄດ້ຍາກ ແລະ ຫຼີກເວັ້ນການຫຼົງທາງໄປສູ່ໝອກໜາ ແລະ ບໍ່ສາມາດຄົ້ນຫາແສງຕາເວັນ. ເມື່ອໝອກໜາແຈ້ງສະຫວ່າງ, ເຈົ້າກໍຈະເຫັນຕົວເຈົ້າເອງທ່າມກາງຄຳພິພາກສາຂອງມື້ທີ່ຍິ່ງໃຫຍ່ນັ້ນ. ເມື່ອເຖິງເວລານັ້ນ, ມື້ຂອງເຮົາແມ່ນຈະໃກ້ເຂົ້າຮອດມະນຸດຊາດແລ້ວ. ເຈົ້າຈະຫຼົບໜີຈາກຄຳພິພາກສາຂອງເຮົາໄດ້ແນວໃດ? ເຈົ້າຈະສາມາດທົນກັບຄວາມຮ້ອນທີ່ເຜົາໄໝ້ຈາກດວງຕາເວັນໄດ້ແນວໃດ? ເມື່ອເວລາເຮົາມອບຄວາມອຸດົມສົມບູນໃຫ້ແກ່ມະນຸດ, ມະນຸດບໍ່ທະນຸຖະໜອມມັນໄວ້ໃນຫົວໃຈ, ແຕ່ປະຖິ້ມມັນໄວ້ໃນບ່ອນທີ່ເຊິ່ງບໍ່ມີໃຜຈະສັງເກດເຫັນມັນໄດ້. ເມື່ອຮອດມື້ຂອງເຮົາລົງມາຮອດມະນຸດ, ມະນຸດກໍ່ຈະບໍ່ສາມາດຄົ້ນພົບຄວາມສົມບູນຂອງເຮົາໄດ້ ຫຼື ເຫັນຄວາມຈິງທີ່ຂົມຂື່ນທີ່ເຮົາໄດ້ເວົ້າຕໍ່ມະນຸດໃນເມື່ອກ່ອນ. ມະນຸດກໍ່ຈະຄວນຄາງ ແລະ ຮ້ອງໄຫ້ ເພາະວ່າມະນຸດໄດ້ສູນເສຍຄວາມແສງສະຫວ່າງ ແລະ ຕົກຢູ່ໃນຄວາມມືດແລ້ວ. ສິ່ງທີ່ພວກເຈົ້າເຫັນໃນທຸກມື້ນີ້ພຽງແຕ່ແມ່ນດາບທີ່ແຫຼມຄົມຈາກປາກຂອງເຮົາເທົ່ານັ້ນ. ພວກເຈົ້າບໍ່ທັນເຄີຍເຫັນໄມ້ໃນມືຂອງເຮົາ ຫຼື ແປວໄຟທີ່ເຮົາເຜົາໄໝ້ມະນຸດ ແລະ ນັ້ນແມ່ນຍ້ອນຫຍັງພວກເຈົ້າຈິ່ງຍັງຈອງຫອງ ແລະ ບໍ່ໃສ່ໃຈຕໍ່ກັບການປາກົດຕົວຂອງເຮົາ. ນັ້ນແມ່ນເຫດຜົນຍ້ອນຫຍັງເຈົ້າຍັງຂັດຂືນກັບເຮົາຢູ່ໃນເຮືອນຂອງເຮົາ, ໂຕ້ຖຽງດ້ວຍຄຳເວົ້າຈາກລີ້ນປາກຂອງມະນຸດກັບຄຳເວົ້າຈາກປາກຂອງເຮົາທີ່ເຮົາໄດ້ເວົ້າໄປແລ້ວ. ມະນຸດບໍ່ຢ້ານກົວເຮົາ ແລະ ເຖິງແມ່ນວ່າ ເຂົາຍັງສືບຕໍ່ເປັນສັດຕູກັບເຮົາຈົນຮອດທຸກມື້ນີ້, ເຂົາກໍຍັງບໍ່ມີຄວາມຢ້ານກົວເລີຍ. ພວກເຈົ້າມີລີ້ນ ແລະ ແຂ້ວທີ່ບໍ່ຊອບທຳໃນປາກຂອງພວກເຈົ້າ. ຄຳເວົ້າ ແລະ ການກະທຳຂອງພວກເຈົ້າຍັງຄືກັບຄຳເວົ້າ ແລະ ການກະທຳຂອງງູທີ່ຊັກຊວນໃຫ້ເອວາເຮັດບາບ. ພວກເຈົ້າຮຽກຮ້ອງຈາກກັນແລະກັນແບບຕາຕໍ່ຕາ ແລະ ແຂ້ວຕໍ່ແຂ້ວ ແລະ ພວກເຈົ້າດີ້ນຣົນໃນການປາກົດຕົວຂອງເຮົາເພື່ອຍາດຊີງຕຳແໜ່ງ, ຊື່ສຽງ ແລະ ຜົນປະໂຫຍດສຳລັບຕົວພວກເຈົ້າເອງ, ແຕ່ພວກເຈົ້າບໍ່ຮູ້ວ່າເຮົາກຳລັງເຝົ້າເບິ່ງຄຳເວົ້າ ແລະ ການກະທຳຂອງພວກເຈົ້າຢ່າງລັບໆຢູ່. ກ່ອນທີ່ພວກເຈົ້າຈະເຂົ້າມາຢູ່ໃນການປາກົດຕົວຂອງເຮົາ, ເຮົາໄດ້ຢັ່ງເຖິງສ່ວນເລິກຂອງຫົວໃຈພວກເຈົ້າແລ້ວ. ມະນຸດຕ້ອງການຫຼົບໜີຈາກກຳມືຂອງເຮົາ ແລະ ຫຼົບຫຼີກການສັງເກດຈາກສາຍຕາເຮົາຢູ່ສະເໝີ, ແຕ່ເຮົາບໍ່ເຄີຍຫຼົບຈາກການເຝົ້າຕິດຕາມຄຳເວົ້າ ຫຼື ການກະທຳຂອງມະນຸດເລີຍ. ກົງກັນຂ້າມ ເຮົາອະນຸຍາດຄຳເວົ້າ ແລະ ການກະທຳເຫຼົ່ານີ້ໃຫ້ເຂົ້າສູ່ສາຍຕາຂອງເຮົາຢ່າງມີຈຸດປະສົງ, ເພື່ອໃຫ້ເຮົາສາມາດລົງໂທດຄວາມບໍ່ຊອບທຳຂອງມະນຸດ ແລະ ປະຕິບັດການພິພາກສາຕໍ່ກັບການກະບົດຂອງມະນຸດ. ສະນັ້ນ ຄຳເວົ້າ ແລະ ການກະທຳຂອງມະນຸດແບບລັບໆຍັງຄົງຢູ່ຕໍ່ໜ້າບັນລັງພິພາກສາຂອງເຮົາ

ສະເໜີ ແລະ ຄຳພິພາກສາຂອງເຮົາບໍ່ເຄີຍປ່ອຍໃຫ້ມະນຸດຫຼຸດພົ້ນໄປໄດ້, ເພາະວ່າການກະບົດຂອງມະນຸດແມ່ນຫຼາຍເກີນໄປ. ພາລະກິດຂອງເຮົາແມ່ນເພື່ອເຜົາທຳລາຍ, ເພື່ອກັ່ນຕອງຄຳເວົ້າ, ເພື່ອການກະທຳທັງໝົດຂອງມະນຸດທີ່ໄດ້ເວົ້າໄປ ແລະ ເພື່ອການກະທຳໄປໂດຍຜ່ານການປາກົດຕົວຂອງພຣະຈິດວິນຍານຂອງເຮົາ. ດ້ວຍວິທີນີ້[ກ] ເມື່ອເຮົາອອກຈາກໂລກນີ້ໄປ, ຜູ້ຄົນຈະຍັງຮັກສາຄວາມຈົງຮັກພັກດີຕໍ່ເຮົາ ແລະ ຈະຍັງຮັບໃຊ້ເຮົາຄືກັນກັບຜູ້ຮັບໃຊ້ອັນບໍລິສຸດຂອງເຮົາທີ່ປະຕິບັດໃນພາລະກິດຂອງເຮົາໃນຕອນນີ້ ແລະ ຈະເຮັດໃຫ້ພາລະກິດຂອງເຮົາໃນໂລກນີ້ສືບຕໍ່ໄປຈົນກວ່າມື້ສຳເລັດ.

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ “ດ້ວຍວິທີນີ້”.

# ພວກເຈົ້າທຸກຄົນຕໍ່າໃນບຸກຄະລິກຫຼາຍ!

ພວກເຈົ້າທຸກຄົນກຳລັງນັ່ງໃນບ່ອນນັ່ງທີ່ງົດງາມ ໂດຍສັ່ງສອນຄົນລຸ້ນໜຸ່ມທີ່ເປັນຄົນປະເພດດຽວກັນກັບພວກເຈົ້າ ແລະ ໃຫ້ພວກເຂົາທຸກຄົນນັ່ງກັບເຈົ້າ. ພວກເຈົ້າຮູ້ ຫຼື ບໍ່ວ່າ ດົນນານມາແລ້ວ "ລູກຫຼານ" ຂອງພວກເຈົ້າແມ່ນບໍ່ມີລົມຫາຍໃຈ ແລະ ເຮັດໃຫ້ພາລະກິດຂອງເຮົາສູນເສຍໄປ. ລັດສະໝີຂອງເຮົາແມ່ນເປັ່ງແສງຈາກດິນແດນແຫ່ງທິດຕາເວັນອອກ ຫາ ດິນແດນແຫ່ງທິດຕາເວັນຕົກ ແຕ່ເມື່ອລັດສະໝີຂອງເຮົາກະຈາຍໄປເຖິງສົ້ນຂົ້ວຂອງແຜ່ນດິນໂລກ ແລະ ເມື່ອມັນເປັ່ງແສງຂຶ້ນມາ ແລະ ສ່ອງສະຫວ່າງອອກໄປ, ເຮົາຈະເອົາລັດສະໝີຂອງເຮົາຈາກທິດຕາເວັນອອກ ແລະ ນຳມັນໄປໃຫ້ທາງທິດຕາເວັນຕົກ ເພື່ອວ່າ ຜູ້ຄົນແຫ່ງຄວາມມືດ ທີ່ໄດ້ປະຖິ້ມເຮົາໃນທິດຕາເວັນອອກ ຈະບໍ່ມີແສງສະຫວ່າງອີກຕໍ່ໄປ. ເມື່ອສິ່ງນັ້ນເກີດຂຶ້ນ, ພວກເຈົ້າຈະດຳລົງຊີວິດຢູ່ໃນຮ່ອມພູແຫ່ງເງົາມືດ. ເຖິງແມ່ນວ່າ ຜູ້ຄົນໃນປັດຈຸບັນ ແມ່ນດີກວ່າເກົ່າຫຼາຍຮ້ອຍເທົ່າ ແຕ່ພວກເຂົາກໍຍັງບໍ່ສາມາດເຮັດຕາມຄວາມຕ້ອງການຂອງເຮົາໄດ້ ແລະ ພວກເຂົາຍັງບໍ່ແມ່ນພະຍານທີ່ຍິ່ງໃຫຍ່ໃຫ້ເຮົາເທື່ອ. ພວກເຈົ້າສາມາດດີກວ່າເກົ່າຮ້ອຍເທົ່າກໍຍ້ອນຜົນທັງໝົດຂອງພາລະກິດຂອງເຮົາ. ມັນແມ່ນໝາກຜົນທີ່ເກີດຈາກພາລະກິດຂອງເຮົາຢູ່ເທິງແຜ່ນດິນໂລກ. ຢ່າງໃດກໍຕາມ, ເຮົາຮູ້ສຶກລັງກຽດຄຳເວົ້າ ແລະ ການກະທຳຂອງພວກເຈົ້າ ເຊັ່ນດຽວກັນກັບບຸກຄະລິກຂອງພວກເຈົ້າ ແລະ ເຮົາຮູ້ສຶກບໍ່ພໍໃຈຫຼາຍກັບການປະຕິບັດຂອງພວກເຈົ້າຢູ່ຕໍ່ໜ້າເຮົາ ເພາະວ່າ ພວກເຈົ້າບໍ່ມີຄວາມເຂົ້າໃຈຫຍັງເລີຍກ່ຽວກັບເຮົາ. ແລ້ວພວກເຈົ້າຈະສາມາດເປັນຜູ້ທີ່ດຳລົງຊີວິດຕາມລັດສະໝີຂອງເຮົາໄດ້ແນວໃດ ແລະ ພວກເຈົ້າຈະສາມາດຈົງຮັກພັກດີທີ່ສຸດຕໍ່ພາລະກິດໃນອະນາຄົດຂອງເຮົາໄດ້ແນວໃດ? ຄວາມເຊື່ອຂອງພວກເຈົ້າແມ່ນງົດງາມຫຼາຍ; ພວກເຈົ້າເວົ້າວ່າ ພວກເຈົ້າເຕັມໃຈທີ່ຈະສະຫຼະທັງຊີວິດຂອງພວກເຈົ້າໃນນາມພາລະກິດຂອງເຮົາ ແລະ ເຕັມໃຈທີ່ຈະເສຍສະລະຊີວິດຂອງພວກເຈົ້າເພື່ອມັນ, ແຕ່ອຸປະນິໄສຂອງພວກເຈົ້າບໍ່ປ່ຽນແປງຈັກໜ້ອຍເລີຍ. ພວກເຈົ້າມີແຕ່ຄຳເວົ້າທີ່ອວດດີ ເຖິງວ່າທີ່ຈິງແລ້ວ ການກະທຳຕົວຈິງຂອງພວກເຈົ້າແມ່ນອະນາດຫຼາຍ. ມັນປະກົດວ່າ ລີ້ນ ແລະ ປາກຂອງຄົນແມ່ນຢູ່ໃນສະຫວັນ ແຕ່ຂາແມ່ນຢູ່ໃນແຜ່ນດິນໂລກ, ດ້ວຍເຫດນັ້ນ ຄຳເວົ້າ ແລະ ການກະທຳຂອງພວກເຂົາ ແລະ ຊື່ສຽງຂອງພວກເຂົາຈຶ່ງຍັງຢູ່ໃນສະພາບທີ່ບໍ່ດີ ແລະ ຖືກທຳລາຍ. ຊື່ສຽງຂອງພວກເຈົ້າແມ່ນຖືກທຳລາຍ, ກິລິຍາທ່າທາງຂອງພວກເຈົ້າແມ່ນເສື່ອມໂຊມລົງ, ວິທີເວົ້າຂອງພວກເຈົ້າແມ່ນຕໍ່າຕ້ອຍ, ຊີວິດຂອງພວກເຈົ້າແມ່ນເປັນຕາລັງກຽດ; ເຖິງແມ່ນແຕ່ຄວາມເປັນມະນຸດຂອງພວກເຈົ້າກໍຈະຈົມລົງສູ່ຄວາມຕໍ່າຕ້ອຍ. ພວກເຈົ້າແມ່ນມີຄວາມຄິດຄັບແຄບຕໍ່ຜູ້ຄົນ ແລະ ພວກເຈົ້າຜິດຖຽງກັນກ່ຽວກັບທຸກຢ່າງທີ່ເປັນເລື່ອງເລັກນ້ອຍ. ພວກເຈົ້າຜິດຖຽງກັນກ່ຽວກັບຊື່ສຽງ ແລະ ສະຖານະຂອງຕົວເອງ ຈົນເຖິງຂັ້ນທີ່ພວກເຈົ້າເຕັມໃຈທີ່ຈະຕົກລົງນະຣົກ ແລະ ເຂົ້າໄປຢູ່ໃນທະເລສາບແຫ່ງໄຟ. ຄຳເວົ້າ ແລະ ການກະທຳໃນປັດຈຸບັນຂອງພວກເຈົ້າແມ່ນພຽງພໍທີ່ເຮັດໃຫ້ເຮົາສາມາດຕັດສິນວ່າ ພວກເຈົ້າເປັນຄົນບາບ. ທັດສະນະຄະຕິຂອງພວກເຈົ້າຕໍ່ພາລະກິດຂອງເຮົາແມ່ນພຽງພໍສຳລັບເຮົາທີ່ຈະຕັດສິນວ່າ ພວກເຈົ້າແມ່ນຄົນທີ່ບໍ່ຊອບທຳ

ແລະ ນິໄສທັງໝົດຂອງພວກເຈົ້າແມ່ນພຽງພໍທີ່ຈະບົ່ງບອກວ່າ ພວກເຈົ້າແມ່ນວິນຍານທີ່ສົກກະປົກ ທີ່ເຕັມໄປດ້ວຍສິ່ງທີ່ໜ້າລັງກຽດ. ການສະແດງອອກຂອງພວກເຈົ້າ ແລະ ສິ່ງທີ່ພວກເຈົ້າເປີດເຜີຍ ແມ່ນພຽງພໍທີ່ຈະບົ່ງບອກວ່າ ພວກເຈົ້າແມ່ນຜູ້ຄົນທີ່ໄດ້ດື່ມເລືອດຂອງວິນຍານທີ່ສົກກະປົກຢ່າງພຽງພໍ. ເມື່ອມີການກ່າວເຖິງການເຂົ້າສູ່ອານາຈັກ ພວກເຈົ້າກໍຈິ່ງຢ່າທໍລະຍົດຄວາມຮູ້ສຶກຂອງຕົວເອງ. ພວກເຈົ້າເຊື່ອວ່າ ການເປັນຢູ່ຂອງພວກເຈົ້າໃນປັດຈຸບັນແມ່ນດີພໍສຳລັບເຈົ້າ ໃນການເຂົ້າສູ່ປະຕູແຫ່ງອານາຈັກຂອງສະຫວັນແລ້ວບໍ? ພວກເຈົ້າເຊື່ອວ່າ ພວກເຈົ້າສາມາດເຂົ້າສູ່ດິນແດນບໍລິສຸດແຫ່ງພາລະກິດ ແລະ ພຣະທຳຂອງເຮົາ ໂດຍທີ່ຄຳເວົ້າ ແລະ ການກະທຳຂອງພວກເຈົ້າບໍ່ຕ້ອງຜ່ານການທົດສອບຂອງເຮົາບໍ? ແມ່ນໃຜສາມາດຕົບຕາທັງສອງຂອງເຮົາໄດ້ຢ່າງສຳເລັດແດ່? ຄວາມຊົ່ວຊ້າ, ຄວາມປະພຶດ ແລະ ການສົນທະນາອັນຕໍ່າຕ້ອຍຂອງພວກເຈົ້າຈະໜີພົ້ນສາຍຕາຂອງເຮົາໄດ້ແນວໃດ? ເຮົາໄດ້ກຳນົດຊີວິດຂອງພວກເຈົ້າເປັນຊີວິດທີ່ດື່ມເລືອດ ແລະ ກິນເນື້ອໜັງຂອງວິນຍານທີ່ສົກກະປົກເຫຼົ່ານັ້ນ ເພາະວ່າ ພວກເຈົ້າລອກຮຽນແບບພວກມັນຢູ່ຕໍ່ໜ້າເຮົາທຸກມື້. ໂດຍສະເພາະຢູ່ຕໍ່ໜ້າເຮົາພຶດຕິກຳຂອງພວກເຈົ້າແມ່ນບໍ່ດີ ແລ້ວເຮົາຈະບໍ່ຮູ້ສຶກລັງກຽດພວກເຈົ້າໄດ້ແນວໃດ? ຄຳເວົ້າຂອງພວກເຈົ້າມີຄວາມບໍ່ບໍລິສຸດຂອງວິນຍານທີ່ສົກກະປົກ: ພວກເຈົ້າອ້ອນວອນ, ປົດບັງ ແລະ ປະຈົບປະແຈງຄືກັບຜູ້ຄົນເຫຼົ່ານັ້ນທີ່ມີສ່ວນຮ່ວມໃນການເຮັດເວດມົນຄາຖາ ແລະ ຄືກັບຜູ້ຄົນເຫຼົ່ານັ້ນທີ່ທໍລະຍົດ ແລະ ດື່ມເລືອດຂອງຜູ້ທີ່ບໍ່ມີຄວາມຊອບທຳ. ການສະແດງອອກຂອງມະນຸດທຸກຄົນ ແມ່ນບໍ່ມີຄວາມຊອບທຳຫຼາຍ ແລ້ວຜູ້ຄົນທັງໝົດຈະສາມາດຖືກຈັດໃຫ້ຢູ່ໃນດິນແດນບໍລິສຸດທີ່ມີຄວາມຊອບທຳໄດ້ແນວໃດ? ເຈົ້າຄິດວ່າ ພຶດຕິກຳທີ່ຊົ່ວຊ້າຂອງເຈົ້າສາມາດເຮັດໃຫ້ເຈົ້າເປັນຜູ້ບໍລິສຸດທີ່ແຕກຕ່າງຈາກຜູ້ທີ່ບໍ່ຊອບທຳບໍ? ໃນທີ່ສຸດ ລີ້ນທີ່ຄ້າຍຄືກັບງູໃຫຍ່ຂອງເຈົ້າຈະທຳລາຍເນື້ອໜັງຂອງເຈົ້າ ໂດຍເຮັດໃຫ້ມີຄວາມພິນາດ ແລະ ເຮັດໃນສິ່ງທີ່ເປັນຕາລັງກຽດ ແລະ ໃນທີ່ສຸດແລ້ວ ມືຂອງເຈົ້າທີ່ເປື້ອນດ້ວຍເລືອດຂອງວິນຍານສົກກະປົກຍັງຈະດຶງວິນຍານຂອງເຈົ້າລົງສູ່ນະຣົກ ແລ້ວເປັນຫຍັງເຈົ້າຄືບໍ່ໂດດເອົາໂອກາດນີ້ ເພື່ອຊຳລະລ້າງມືຂອງເຈົ້າທີ່ປົກຫຸ້ມດ້ວຍຄວາມສົກກະປົກ? ເປັນຫຍັງເຈົ້າບໍ່ໃຊ້ໂອກາດນີ້ໃຫ້ເປັນປະໂຫຍດເພື່ອຕັດລີ້ນຂອງເຈົ້າທີ່ກ່າວຄຳເວົ້າບໍ່ຊອບທຳ? ເປັນໄປໄດ້ບໍ ທີ່ເຈົ້າເຕັມໃຈທົນທຸກພາຍໃຕ້ແປວໄຟຂອງນະຣົກ ຍ້ອນມືທັງສອງ, ລີ້ນ ແລະ ປາກຂອງເຈົ້າ? ເຮົາເຝົ້າເບິ່ງໃຈຂອງທຸກຄົນດ້ວຍຕາທັງສອງ ເພາະວ່າ ແຕ່ດົນນານມາແລ້ວ ກ່ອນທີ່ເຮົາໄດ້ສ້າງມະນຸດ ເຮົາໄດ້ກຳຫົວໃຈຂອງພວກເຂົາຢູ່ໃນມືຂອງເຮົາ. ເຮົາເບິ່ງໃຈມະນຸດອອກຕັ້ງແຕ່ດົນ, ສະນັ້ນຄວາມຄິດໃນໃຈຂອງມະນຸດຈະສາມາດໜີພົ້ນສາຍຕາຂອງເຮົາໄດ້ແນວໃດ? ພວກເຂົາຈະສາມາດຫຼົບໜີຈາກພຣະວິນຍານທີ່ເຜົາໄໝ້ຂອງເຮົາໃຫ້ທັນເວລາໄດ້ແນວໃດ?

ປາກຂອງເຈົ້າແມ່ນໃຈດີກວ່ານົກເຂົາ ແຕ່ໃຈຂອງເຈົ້າແມ່ນເປັນຕາຢ້ານກວ່າງູເຖົ້າ. ປາກຂອງເຈົ້າແມ່ນງາມປານປາກຂອງຍິງຊາວລີບັງ ແຕ່ຫົວໃຈຂອງເຈົ້າແມ່ນບໍ່ງົດງາມສໍ່າໃຈຂອງພວກເຂົາເລີຍ ແລະ ມັນບໍ່ສາມາດປຽບທຽບກັບຄວາມງາມຂອງຄົນການາອານຢ່າງແນ່ນອນ. ໃຈຂອງເຈົ້າແມ່ນມີຄວາມຫຼອກລວງຫຼາຍ! ສິ່ງທີ່ເຮົາກຽດຊັງແມ່ນປາກແຫ່ງຄວາມບໍ່ຊອບທຳ ແລະ ໃຈຂອງພວກເຂົາ

ແລະ ຄວາມຕ້ອງການຂອງເຮົາຕໍ່ຜູ້ຄົນແມ່ນບໍ່ສູງສິ່ງກວ່າໄພ່ພົນ, ມັນເປັນພຽງແຕ່ວ່າ ເຮົາຮູ້ສຶກກຽດຊັງການກະທຳທີ່ຊົ່ວຊ້າຂອງຄົນທີ່ບໍ່ມີຄວາມຊອບທຳ ແລະ ເຮົາຫວັງວ່າ ພວກເຂົາຈະສາມາດປະຖິ້ມຄວາມສົກກະປົກຂອງພວກເຂົາໄດ້ ແລະ ໜີອອກຈາກສະພາບທີ່ລຳບາກໃນປັດຈຸບັນເຫຼົ່ານັ້ນ ແລະ ດຳລົງຊີວິດ ແລະ ມີຄວາມບໍລິສຸດຮ່ວມກັບຜູ້ທີ່ມີຄວາມຊອບທຳ. ພວກເຈົ້າແມ່ນຢູ່ໃນສະຖານະການດຽວກັນກັບເຮົາ ແຕ່ພວກເຈົ້າແມ່ນຖືກປົກຫຸ້ມໄປດ້ວຍຄວາມສົກກະປົກ, ພວກເຈົ້າບໍ່ໄດ້ມີຄວາມຄ້າຍຄືກັບມະນຸດທີ່ຖືກສ້າງຂຶ້ນໃນເບື້ອງຕົ້ນແມ່ນແຕ່ໜ້ອຍດຽວ ແລະ ຍ້ອນວ່າ ທຸກມື້ນີ້ພວກເຈົ້າຮຽນແບບຄວາມຄ້າຍຄືຂອງຈິດວິນຍານທີ່ສົກກະປົກເຫຼົ່ານັ້ນ ແລະ ພວກເຈົ້າເຮັດໃນສິ່ງທີ່ພວກມັນເຮັດ ແລະ ເວົ້າໃນສິ່ງທີ່ພວກມັນເວົ້າ, ທຸກພາກສ່ວນຂອງພວກເຈົ້າ ແມ່ນແຕ່ລີ້ນ ແລະປາກຂອງພວກເຈົ້າ ແມ່ນແຊ່ໃນນໍ້າເປື້ອນຂອງພວກວິນຍານເຫຼົ່ານັ້ນ. ມັນເຖິງຈຸດທີ່ວ່າ ພວກເຈົ້າຖືກປົກຫຸ້ມດ້ວຍຮອຍດ່າງເຫຼົ່ານັ້ນຈົນໝົດ ແລະ ບໍ່ມີແມ່ນແຕ່ສ່ວນດຽວທີ່ສາມາດຖືກນຳໃຊ້ເພື່ອພາລະກິດຂອງເຮົາ. ມັນຊ່າງເປັນເລື່ອງໜ້າເສົ້າໃຈຫຼາຍ! ພວກເຈົ້າດຳລົງຊີວິດໃນໂລກຂອງຝູງມ້າ ແລະ ງົວ ແຕ່ແທ້ຈິງແລ້ວ ພວກເຈົ້າບໍ່ຮູ້ສຶກເປັນທຸກເລີຍ; ພວກເຈົ້າແມ່ນເຕັມໄປດ້ວຍຄວາມສຸກ ແລະ ພວກເຈົ້າດຳລົງຊີວິດຢ່າງເສລີ ແລະ ຢ່າງສະບາຍ. ພວກເຈົ້າກຳລັງລອຍໄປມາຢູ່ໃນນໍ້າເປື້ອນແຫ່ງນີ້ ແຕ່ບໍ່ຮູ້ເລີຍວ່າ ຕົນເອງໄດ້ຕົກຢູ່ໃນສະຖານະການດັ່ງກ່າວ. ທຸກມື້ນີ້ເຈົ້າຄົບຫາກັບວິນຍານທີ່ສົກກະປົກ ແລະຜົວພັນກັບ “ອຸດຈະລະ”. ຊີວິດຂອງເຈົ້າແມ່ນຕໍ່າຕ້ອຍຫຼາຍ ແຕ່ເຈົ້າບໍ່ຮູ້ວ່າ ເຈົ້າບໍ່ໄດ້ຢູ່ໃນໂລກມະນຸດນີ້ແລ້ວ ແລະ ເຈົ້າບໍ່ໄດ້ເປັນຂອງຕົວເອງ. ເຈົ້າຮູ້ບໍວ່າ ຊີວິດຂອງເຈົ້າແມ່ນຖືກວິນຍານທີ່ສົກກະປົກຢຽບຢໍ່າມາແຕ່ດົນ ແລະ ບຸກຄະລິກຂອງເຈົ້າແມ່ນຖືກນໍ້າສົກກະປົກເຮັດໃຫ້ເປິເປື້ອນແຕ່ດົນນານມາແລ້ວ? ເຈົ້າຄິດວ່າ ເຈົ້າກຳລັງດຳລົງຊີວິດຢູ່ໃນວິມານແຫ່ງສະຫວັນບົນດິນ ແລະ ເຈົ້າຢູ່ໃນລະຫວ່າງຄວາມສຸກບໍ? ເຈົ້າບໍ່ຮູ້ບໍວ່າ ເຈົ້າໄດ້ດຳລົງຊີວິດຢູ່ກັບວິນຍານທີ່ສົກກະປົກ ແລະ ເຈົ້າໄດ້ດຳເນີນຊີວິດຢູ່ກັບທຸກສິ່ງທີ່ພວກມັນໄດ້ກະກຽມໄວ້ໃຫ້ເຈົ້າ? ການດຳລົງຊີວິດຂອງເຈົ້າຈະສາມາດມີຄວາມໝາຍໄດ້ແນວໃດ? ຊີວິດຂອງເຈົ້າຈະສາມາດມີຄຸນຄ່າໄດ້ແນວໃດ? ເຈົ້າດີ້ນຮົນແລ່ນໄປມາຈົນເຖິງເພື່ອພໍ່ແມ່ຂອງເຈົ້າທີ່ເປັນວິນຍານທີ່ສົກກະປົກ ແຕ່ເຈົ້າບໍ່ຮູ້ວ່າ ຜູ້ທີ່ເຮັດໃຫ້ເຈົ້າຕິດກັບດັກ ແມ່ນພວກວິນຍານທີ່ສົກກະປົກເຫຼົ່ານັ້ນ ເຊິ່ງກໍຄືພໍ່ແມ່ຂອງເຈົ້າ ຜູ້ທີ່ໃຫ້ກຳເນີດເຈົ້າ ແລະ ຊຸບລ້ຽງເຈົ້ານັ້ນເອງ. ຍິ່ງໄປກວ່ານັ້ນ, ເຈົ້າບໍ່ຮູ້ວ່າ ຄວາມສົກກະປົກຂອງເຈົ້າທັງໝົດ ທີ່ຈິງແລ້ວ ແມ່ນໄດ້ມາຈາກພວກເຂົາ; ສິ່ງດຽວທີ່ເຈົ້າຮູ້ແມ່ນພວກເຂົາສາມາດມອບ “ຄວາມສຸກ” ໃຫ້ແກ່ເຈົ້າ, ພວກເຂົາບໍ່ຂ້ຽນຕີເຈົ້າ ຫຼື ພວກເຂົາບໍ່ໄດ້ຕັດສິນເຈົ້າ ແລະ ໂດຍສະເພາະ ພວກເຂົາແມ່ນບໍ່ໄດ້ສາບແຊ່ງເຈົ້າ. ພວກເຂົາບໍ່ເຄີຍໃຈຮ້າຍໃສ່ເຈົ້າ ແຕ່ພວກເຂົາປະຕິບັດກັບເຈົ້າຢ່າງສຸພາບ ແລະ ອ່ອນໂຍນ. ຄຳເວົ້າຂອງພວກເຂົາຫຼໍ່ລ້ຽງຈິດໃຈຂອງເຈົ້າແລະ ເຮັດໃຫ້ເຈົ້າປະທັບໃຈ ດັ່ງນັ້ນ ຈິດໃຈຂອງເຈົ້າຈຶ່ງສັບສົນໂດຍບໍ່ຮູ້ສຶກຕົວ, ເຈົ້າຖືກດູດດຶງເຂົ້າໄປຫາພວກເຂົາ ແລະ ເຕັມໃຈທີ່ຈະຮັບໃຊ້ພວກເຂົາ ເປັນບ່ອນລະບາຍ ພ້ອມກັບເປັນຄົນຮັບໃຊ້ຂອງພວກເຂົາ. ເຈົ້າບໍ່ຕໍ່ວ່າຈັກດີ້, ແຕ່ເຕັມໃຈເຮັດວຽກໃຫ້ພວກເຂົາຄືກັບໝາ, ຄືກັບມ້າ; ເຈົ້າຖືກພວກເຂົາຫຼອກລວງແລ້ວ. ເພາະເຫດຜົນດັ່ງກ່າວນີ້, ເຈົ້າຈຶ່ງບໍ່ມີປະຕິກິລິຍາຕໍ່ພາລະກິດທີ່ເຮົາກະທຳ

ເລີຍ. ສິມພໍເຈົ້າຈຶ່ງຕ້ອງການຫຼຸດອອກຈາກມືຂອງເຮົາຢ່າງລັບໆຕະຫຼອດເວລາ ແລະ ສິມພໍເຈົ້າຈຶ່ງຕ້ອງການໃຊ້ຄໍາເວົ້າທີ່ອ່ອນຫວານເພື່ອຫຼອກລວງເອົາຄວາມພໍໃຈຈາກເຮົາຕະຫຼອດເວລາ. ແຕ່ຄວາມຈິງແລ້ວ ເຈົ້າມີແຜນການ ແລະ ໄດ້ກະກຽມສິ່ງອື່ນໆໄວ້ຢູ່ແລ້ວ. ເຈົ້າສາມາດເຫັນການກະທໍາເລັກນ້ອຍຂອງເຮົາເປັນດັ່ງອິງຊີງລິດທານຸພາບສູງສຸດ ແຕ່ເຈົ້າບໍ່ຮູ້ເຖິງການພິພາກສາ ແລະ ການລົງໂທດຂອງເຮົາແມ່ນແຕ່ໜ້ອຍດຽວ. ເຈົ້າບໍ່ຮູ້ວ່າ ການຕີສອນຂອງເຮົາໄດ້ເລີ່ມຂຶ້ນຕອນໃດ; ເຈົ້າຮູ້ແຕ່ວິທີຫຼອກລວງເຮົາເທົ່ານັ້ນ ແຕ່ເຈົ້າບໍ່ຮູ້ວ່າ ເຮົາຈະບໍ່ອົດທົນຕໍ່ການເຮັດຜິດຂອງມະນຸດ. ໃນເມື່ອເຈົ້າໄດ້ກໍານົດຄວາມຕັ້ງໃຈຂອງເຈົ້າເພື່ອຮັບໃຊ້ເຮົາແລ້ວ, ເຮົາກໍຈະບໍ່ປ່ອຍໃຫ້ເຈົ້າໄປ. ເຮົາຄືພຣະເຈົ້າທີ່ມີຄວາມອິດສາ ແລະ ເຮົາແມ່ນພຣະເຈົ້າ ຜູ້ທີ່ອິດສາມະນຸດ. ໃນເມື່ອເຈົ້າເອົາຄໍາເວົ້າຂອງເຈົ້າໄປວາງຢູ່ແທ່ນບູຊາແລ້ວ, ເຮົາຈະບໍ່ອົດທົນຕໍ່ການທີ່ເຈົ້າຈະແລ່ນອອກຈາກສາຍຕາຂອງເຮົາ ແລະ ເຮົາຈະບໍ່ອົດທົນຕໍ່ການທີ່ເຈົ້າຈະຮັບໃຊ້ເຈົ້ານາຍສອງຄົນ. ເຈົ້າຄິດວ່າ ເຈົ້າສາມາດມີຄວາມຮັກອີກ ຫຼັງຈາກທີ່ເຈົ້າໄດ້ເອົາຄໍາເວົ້າຂອງເຈົ້າໄປວາງຢູ່ແທ່ນບູຊາຂອງເຮົາ ແລະ ຫຼັງຈາກທີ່ເຈົ້າວາງຄໍາເວົ້າຂອງເຈົ້າໄວ້ຢູ່ຕໍ່ໜ້າຕໍ່ຕາຂອງເຮົາບໍ? ເຮົາຈະປ່ອຍໃຫ້ຜູ້ຄົນຫຼອກລວງເຮົາແບບນັ້ນໄດ້ແນວໃດ? ເຈົ້າຄິດວ່າ ເຈົ້າສາມາດປະຕິຍານ ແລະ ສາບານຕໍ່ເຮົາດ້ວຍລີ້ນຂອງເຈົ້າບໍ? ເຈົ້າສາມາດສາບານຕໍ່ບັນລັງຂອງເຮົາ ເຊິ່ງແມ່ນສິ່ງທີ່ສູງສຸດໄດ້ແນວໃດ? ເຈົ້າຄິດວ່າ ຄໍາສາບານຂອງເຈົ້າໄດ້ຕາຍໄປແລ້ວບໍ? ເຖິງແມ່ນວ່າ ເນື້ອໜັງຂອງພວກເຈົ້າຈະຕາຍໄປແລ້ວ ແຕ່ເຮົາຂໍບອກພວກເຈົ້າວ່າ ຄໍາສາບານຂອງພວກເຈົ້າບໍ່ສາມາດຕາຍໄດ້. ໃນທີ່ສຸດ, ເຮົາຈະຕັດສິນລົງໂທດພວກເຈົ້າ ໂດຍອີງໃສ່ຄໍາສາບານຂອງພວກເຈົ້າ. ແຕ່ພວກເຈົ້າກໍຍັງຄິດວ່າ ພວກເຈົ້າຈະສາມາດຍົກຄໍາເວົ້າຂອງພວກເຈົ້າຢູ່ຕໍ່ໜ້າເຮົາເພື່ອຮັບມືກັບເຮົາ ແລະ ໃຈຂອງພວກເຈົ້າຍັງສາມາດຮັບໃຊ້ຈິດວິນຍານທີ່ສົກກະປົກ ແລະ ຈິດວິນຍານທີ່ຊົ່ວຮ້າຍ. ຄວາມໂມໂຫຂອງເຮົາຈະສາມາດອົດທົນຕໍ່ຜູ້ຄົນເຫຼົ່ານັ້ນທີ່ຄືໝາ ແລະ ໝູທີ່ຫຼອກລວງເຮົາໄດ້ແນວໃດ? ເຮົາຕ້ອງປະຕິບັດພຣະດໍາລັດຂອງເຮົາ ແລະ ຍາດເອົາຜູ້ທີ່ "ເຊື່ອໃນສາສະໜາ" ຜູ້ທີ່ເຊື່ອໃນຕົວເຮົາມາຈາກກໍາມືຂອງວິນຍານສົກກະປົກ ເພື່ອວ່າພວກເຂົາອາດຈະ "ລໍຖ້າ" ເຮົາໃນລັກສະນະທີ່ມີວິໄນ, ເປັນງົວຂອງເຮົາ, ເປັນມ້າຂອງເຮົາ ແລະ ຢູ່ໃນອໍານາດແຫ່ງການສັງຫານຂອງເຮົາ. ເຮົາຈະເຮັດໃຫ້ເຈົ້າຍົກຄວາມຕັ້ງໃຈທີ່ຜ່ານມາຂອງເຈົ້ານັ້ນສູງຂຶ້ນ ແລະ ມາຮັບໃຊ້ເຮົາອີກຄັ້ງ. ເຮົາຈະບໍ່ອົດທົນຕໍ່ຜູ້ທີ່ຫຼອກລວງເຮົາ. ເຈົ້າຄິດວ່າ ເຈົ້າຈະສາມາດຮ້ອງຂໍ ແລະ ຕົວະແບບໜ້າດ້ານໆຢູ່ຕໍ່ໜ້າເຮົາບໍ? ເຈົ້າຄິດວ່າ ເຮົາບໍ່ໄດ້ຍິນ ຫຼື ເຫັນຄໍາເວົ້າ ແລະ ການກະທໍາຂອງເຈົ້າບໍ? ຄໍາເວົ້າ ແລະ ການກະທໍາຂອງເຈົ້າຈະບໍ່ຢູ່ໃນສາຍຕາຂອງເຮົາໄດ້ແນວໃດ? ເຮົາຈະປ່ອຍໃຫ້ຜູ້ຄົນຫຼອກລວງເຮົາແບບນັ້ນໄດ້ແນວໃດ?

ເຮົາໄດ້ຢູ່ທ່າມກາງພວກເຈົ້າ, ພົວພັນກັບພວກເຈົ້າໃນລະດູໃບໄມ້ປົ່ງ ແລະ ໃນລະດູໃບໄມ້ຫຼົ່ນເປັນເວລາຫຼາຍປີ, ເຮົາໄດ້ດໍາລົງຊີວິດຢູ່ໃນທ່າມກາງພວກເຈົ້າເປັນເວລາດົນນານ ແລະ ໄດ້ດໍາລົງຊີວິດຢູ່ກັບພວກເຈົ້າ. ແລ້ວຄວາມປະພຶດທີ່ຊົ່ວຊ້າຂອງພວກເຈົ້າຈະຫຼຸດພົ້ນອອກໄປຕໍ່ໜ້າຕໍ່ຕາຂອງເຮົາໄດ້ແນວໃດ? ຄໍາເວົ້າທີ່ປະທັບໃຈເຫຼົ່ານັ້ນຂອງພວກເຈົ້າ ແມ່ນຍັງດັງກ້ອງຢູ່ໃນຫູຂອງເຮົາຢູ່ຕະຫຼອດເວລາ; ຄວາມທະເຍີທະຍານຂອງພວກເຈົ້າເປັນຈໍານວນລ້ານໆ ແມ່ນຖືກວາງຢູ່ແທ່ນບູຊາຂອງເຮົາຈົນ

ບໍ່ສາມາດນັບໄດ້. ເຖິງຢ່າງໃດກໍຕາມ, ໃນສ່ວນການອຸທິດຕົນ ແລະ ສິ່ງທີ່ພວກເຈົ້າໄດ້ໃຊ້ໄປແລ້ວແມ່ນບໍ່ມີແມ່ນແຕ່ໜ້ອຍດຽວ. ຄວາມຈິງໃຈຂອງພວກເຈົ້າແມ່ນແຕ່ຢົດນ້ອຍໆຢົດດຽວກໍບໍ່ມີຢູ່ເທິງແທ່ນບູຊາຂອງເຮົາ. ໝາກຜົນແຫ່ງຄວາມເຊື່ອຂອງພວກເຈົ້າທີ່ມີຕໍ່ເຮົາແມ່ນຢູ່ໃສ? ພວກເຈົ້າໄດ້ຮັບຄວາມກະລຸນາທີ່ບໍ່ມີວັນສິ້ນສຸດຈາກເຮົາ ແລະ ພວກເຈົ້າໄດ້ເຫັນຄວາມລຶກລັບທີ່ບໍ່ມີວັນສິ້ນສຸດຈາກສະຫວັນ ແລະ ເຮົາຍັງໄດ້ສະແດງແປວໄຟແຫ່ງສະຫວັນໃຫ້ພວກເຈົ້າເຫັນ ແຕ່ເຮົາບໍ່ມີໃຈທີ່ຈະຈູດເຜົາພວກເຈົ້າ. ຢ່າງໃດກໍຕາມ ພວກເຈົ້າໄດ້ມອບໃຫ້ເຮົາຫຼາຍສໍ່າໃດແລ້ວເພື່ອເປັນການຕອບແທນ? ພວກເຈົ້າເຕັມໃຈມອບໃຫ້ເຮົາຫຼາຍສໍ່າໃດ? ເຈົ້າຖືອາຫານທີ່ເຮົາໄດ້ເອົາໃຫ້ເຈົ້າ ແລ້ວຫັນມາຖວາຍມັນໃຫ້ກັບເຮົາ ໂດຍເວົ້າວ່າ ມັນແມ່ນສິ່ງທີ່ເຈົ້າໄດ້ຮັບເປັນການຕອບແທນ ເຫື່ອແຮງຈາກການເຮັດວຽກໜັກຂອງເຈົ້າ ເຈົ້າຈຶ່ງຖວາຍທຸກສິ່ງທີ່ເຈົ້າມີໃຫ້ກັບເຮົາ. ເຈົ້າບໍ່ສາມາດຮູ້ໄດ້ແນວໃດວ່າ "ສິ່ງບໍລິຈາກ" ຂອງເຈົ້າທີ່ມີໃຫ້ເຮົາ ແມ່ນທຸກສິ່ງທີ່ເຈົ້າໄດ້ລັກຈາກແທ່ນບູຊາຂອງເຮົາ ແລ້ວຕອນນີ້ເຈົ້າກໍາລັງຖວາຍສິ່ງນັ້ນໃຫ້ກັບເຮົາ. ເຈົ້າບໍ່ແມ່ນກຳລັງຫຼອກລວງເຮົາບໍ? ເຈົ້າບໍ່ໄດ້ຮູ້ບໍວ່າ ສິ່ງທີ່ເຮົາເພີດເພີນນຳໃນປັດຈຸບັນນີ້ ແມ່ນສິ່ງຖວາຍທັງໝົດທີ່ຢູ່ແທ່ນບູຊາຂອງເຮົາ ແລະ ບໍ່ແມ່ນສິ່ງທີ່ເຈົ້າໄດ້ຮັບມາ ເພື່ອເປັນການຕອບແທນສໍາລັບການເຮັດວຽກໜັກຂອງເຈົ້າ ແລະ ນໍາສິ່ງນັ້ນມາຖວາຍໃຫ້ເຮົາ? ພວກເຈົ້າຈັ່ງແມ່ນກ້າຫຼອກລວງເຮົາແທ້ໆ ແລ້ວເຮົາຈະສາມາດອະໄພໃຫ້ພວກເຈົ້າໄດ້ແນວໃດ? ເຮົາຈະສາມາດອົດກັ້ນກັບສິ່ງນີ້ໄດ້ດົນປານໃດ? ເຮົາໄດ້ມອບທຸກສິ່ງທຸກຢ່າງໃຫ້ແກ່ພວກເຈົ້າ. ເຮົາໄດ້ເປີດເຜີຍທຸກສິ່ງທຸກຢ່າງເພື່ອພວກເຈົ້າ, ໄດ້ສະໜອງເພື່ອຄວາມຕ້ອງການຂອງພວກເຈົ້າ ແລະ ເປີດຕາຂອງພວກເຈົ້າ ແຕ່ພວກເຈົ້າກໍຍັງຫຼອກລວງເຮົາແບບນີ້ ໂດຍເມີນເສີຍຕໍ່ສາມັນສໍານຶກຂອງພວກເຈົ້າເອງ. ເຮົາໄດ້ປະທານທຸກສິ່ງແກ່ພວກເຈົ້າໂດຍບໍ່ເຫັນແກ່ຕົວ ເພື່ອວ່າ ເຖິງພວກເຈົ້າຈະທົນທຸກ ພວກເຈົ້າກໍຈະໄດ້ຮັບທຸກສິ່ງຈາກເຮົາ ເຊິ່ງເປັນສິ່ງທີ່ເຮົາໄດ້ນໍາມາຈາກສະຫວັນ. ນອກເໜືອຈາກນີ້, ພວກເຈົ້າບໍ່ອຸທິດຕົວຈັກດີ້ ແລະ ເຖິງແມ່ນວ່າ ພວກເຈົ້າຈະໄດ້ບໍລິຈາກພຽງເລັກນ້ອຍກໍຕາມ ພວກເຈົ້າກໍຈະມາ "ສະສາງ" ກັບເຮົາພາຍຫຼັງ. ສິ່ງບໍລິຈາກຂອງເຈົ້າຈະບໍ່ເສຍຖິ້ມບໍ? ສິ່ງທີ່ເຈົ້າໄດ້ມອບໃຫ້ກັບເຮົາແມ່ນບໍ່ມີຫຍັງ ແຕ່ເປັນພຽງເມັດຊາຍໜຶ່ງເມັດ ແຕ່ສິ່ງທີ່ເຈົ້າຂໍຈາກເຮົາແມ່ນເປັນຄໍາໜຶ່ງໂຕນ. ເຈົ້າບໍ່ໄຮ້ເຫດຜົນເກີນໄປໂພດບໍ? ເຮົາເຮັດພາລະກິດໃນທ່າມກາງພວກເຈົ້າ. ອັດຕາສິບສ່ວນຮ້ອຍທີ່ເຮົາຄວນໄດ້ຮັບບໍ່ເຫັນແມ່ນແຕ່ຮ່ອງຮອຍຈັກດີ້ ຢ່າວ່າແຕ່ການເສຍສະຫຼະເພີ່ມເຕີມເລີຍ. ຍິ່ງໄປກວ່ານັ້ນ, ອັດຕາສິບສ່ວນຮ້ອຍທີ່ຄົນເຫຼື້ອມໃສໃນສາສະໜາບໍລິຈາກ ແມ່ນຖືກຄົນຊົ່ວຍຶດເອົາໄປໝົດ. ພວກເຈົ້າທຸກຄົນບໍ່ແມ່ນແຕກກະຈາຍອອກຈາກເຮົາບໍ? ພວກເຈົ້າທຸກຄົນບໍ່ແມ່ນເປັນປໍລະປັກກັບເຮົາບໍ? ພວກເຈົ້າທຸກຄົນບໍ່ແມ່ນກຳລັງທຳລາຍແທ່ນບູຊາຂອງເຮົາບໍ? ແລ້ວຈະໃຫ້ເຮົາເຫັນບຸກຄົນປະເພດນີ້ເປັນສັບສົມບັດໃນສາຍຕາຂອງເຮົາໄດ້ແນວໃດ? ພວກເຂົາບໍ່ແມ່ນໝູ ແລະ ໝາທີ່ເຮົາກຽດຊັງບໍ? ຈະໃຫ້ເຮົາສາມາດເອີ້ນການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າເປັນສັບສົມບັດໄດ້ແນວໃດ? ພາລະກິດຂອງເຮົາແມ່ນເພື່ອຜູ້ໃດກັນແທ້? ເປັນໄປໄດ້ບໍທີ່ມັນຈະໂຈມຕີພວກເຈົ້າທຸກຄົນ ເພື່ອເປີດເຜີຍອຳນາດຂອງເຮົາ? ຊີວິດຂອງພວກເຈົ້າທຸກຄົນບໍ່ແມ່ນເພິ່ງພາຂໍ້ພຣະທຳຂອງເຮົາບໍ? ເປັນຫຍັງເຮົາຈຶ່ງໃຊ້ແຕ່

ພຣະທຳເພື່ອແນະນຳພວກເຈົ້າເທົ່ານັ້ນ ແລະ ເປັນຫຍັງເຮົາຈຶ່ງບໍ່ໄດ້ປ່ຽນພຣະທຳເປັນຂໍ້ມູນຄວາມຈິງເພື່ອໂຈມຕີພວກເຈົ້າໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້? ພຣະທຳ ແລະ ພາລະກິດຂອງເຮົາແມ່ນພຽງເພື່ອໂຈມຕີມະນຸດບໍ? ເຮົາແມ່ນພຣະເຈົ້າທີ່ຂ້າຄົນບໍລິສຸດໂດຍບໍ່ມີການຈຳແນກບໍ? ຕອນນີ້ ມີພວກເຈົ້າຈັກຄົນທີ່ມາຢູ່ຕໍ່ໜ້າເຮົາດ້ວຍຕົວຕົນຂອງພວກເຈົ້າທັງໝົດເພື່ອສະແຫວງຫາເສັ້ນທາງທີ່ຖືກຕ້ອງຂອງຊີວິດມະນຸດ? ມີແຕ່ຮ່າງກາຍຂອງພວກເຈົ້າທີ່ຢູ່ຕໍ່ໜ້າເຮົາ ແຕ່ໃຈຂອງພວກເຈົ້າແມ່ນຍັງລອຍນວນ ແລະ ຫ່າງເຫີນຈາກເຮົາຫຼາຍ. ຍ້ອນພວກເຈົ້າບໍ່ຮູ້ວ່າ ພາລະກິດທີ່ແທ້ຈິງຂອງເຮົາແມ່ນຫຍັງ, ຈຶ່ງມີພວກເຈົ້າບາງຄົນທີ່ຕ້ອງການໜີອອກຈາກເຮົາ ແລະ ຜູ້ທີ່ຕ້ອງການຢູ່ຫ່າງຈາກເຮົາ ແລະ ຕ້ອງການດຳລົງຊີວິດຢູ່ໃນວິມານສະຫວັນແຫ່ງນັ້ນ ທີ່ບໍ່ມີການຕີສອນ ແລະ ການພິພາກສາ. ນີ້ບໍ່ແມ່ນສິ່ງທີ່ຜູ້ຄົນປາດຖະໜາໃນໃຈຂອງພວກເຂົາບໍ? ແນ່ນອນ ເຮົາບໍ່ໄດ້ບັງຄັບເຈົ້າ. ເສັ້ນທາງໃດກໍຕາມທີ່ເຈົ້າເລືອກ ແມ່ນການເລືອກຂອງເຈົ້າເອງ ແລະ ເສັ້ນທາງໃນປັດຈຸບັນແມ່ນໄປພ້ອມກັບການພິພາກສາ ແລະ ການສາບແຊ່ງ ແຕ່ພວກເຈົ້າທຸກຄົນຄວນຮູ້ວ່າ ສິ່ງທີ່ເຮົາໄດ້ປະທານໃຫ້ແກ່ພວກເຈົ້າ ບໍ່ວ່າຈະແມ່ນການພິພາກສາ ຫຼື ການຕີສອນລ້ວນແລ້ວແຕ່ແມ່ນຂອງຂວັນທີ່ດີທີ່ສຸດ ທີ່ເຮົາສາມາດມອບແກ່ພວກເຈົ້າ ແລະ ພວກມັນແມ່ນທຸກສິ່ງທີ່ພວກເຈົ້າຕ້ອງການຢ່າງຮີບດ່ວນ.

# ພາລະກິດໃນຍຸກແຫ່ງພຣະບັນຍັດ

ພາລະກິດທີ່ພຣະເຢໂຮວາໄດ້ເຮັດຕໍ່ຊົນຊາດອິດສະຣາເອນນັ້ນ ໄດ້ສ້າງສະຖານທີ່ໆເປັນຕົ້ນກຳເນີດຂອງພຣະເຈົ້າເທິງແຜ່ນດິນໂລກເຊິ່ງພ້ອມນີ້ ຍັງເປັນສະຖານທີ່ທີ່ສັກສິດທີ່ພຣະອົງໄດ້ປະທັບຢູ່. ພຣະອົງໄດ້ຈຳກັດພາລະກິດຂອງພຣະອົງສະເພາະຊົນຊາດອິດສະຣາເອນເທົ່ານັ້ນ. ທຳອິດພຣະອົງບໍ່ໄດ້ດຳເນີນພາລະກິດນອກດິນແດນອິດສະຣາເອນ ແຕ່ກົງກັນຂ້າມ ພຣະອົງເລືອກຊົນຊາດທີ່ພຣະອົງເຫັນວ່າ ເໝາະສົມໃນການຈຳກັດຂອບເຂດພາລະກິດຂອງພຣະອົງ. ອິດສະຣາເອນເປັນສະຖານທີ່ພຣະເຈົ້າສ້າງອາດາມ ແລະ ເອວາ. ພຣະເຢໂຮວາໄດ້ສ້າງມະນຸດຈາກລະອອງຝຸ່ນຂອງສະຖານທີ່ນັ້ນ ແລະ ດັ່ງນັ້ນສະຖານທີ່ດັ່ງກ່າວຈຶ່ງກາຍເປັນຖານພາລະກິດ ຂອງພຣະອົງໃນແຜ່ນດິນໂລກ. ຊົນຊາດອິດສະຣາເອນທີ່ເປັນລູກຫຼານຂອງໂນອາ ແລະ ທັງເປັນລູກຫຼານຂອງອາດາມ, ພວກເຂົາຄືມະນຸດທີ່ເປັນພື້ນຖານພາລະກິດຂອງພຣະເຢໂຮວາໃນແຜ່ນດິນໂລກ.

ໃນເວລານັ້ນ ຄວາມສຳຄັນ, ຈຸດປະສົງ ແລະ ບາດກ້າວພາລະກິດຂອງພຣະເຢໂຮວາ ໃນດິນແດນອິດສະຣາເອນແມ່ນເປັນການລິເລີ່ມພາລະກິດຂອງພຣະອົງໃນທົ່ວແຜ່ນດິນໂລກເຊິ່ງພຣະອົງໄດ້ຖືເອົາດິນແດນອິດສະຣາເອນເປັນຈຸດສູນກາງ, ແລ້ວຫລັງຈາກນັ້ນຈຶ່ງໄດ້ຄ່ອຍໆຂະຫຍາຍອອກໄປສູ່ບັນດາປະເທດຕ່າງໆ. ນີ້ຄືຫຼັກການ ການດຳເນີນພາລະກິດຂອງພຣະອົງໃນທົ່ວຈັກກະວານເພື່ອສ້າງຮູບແບບພ້ອມຂະຫຍາຍກວ້າງອອກໄປຈົນກວ່າຜູ້ຄົນໃນທົ່ວຈັກກະວານຈະໄດ້ຮັບຂ່າວປະເສີດຂອງພຣະອົງ. ຄົນອິດສະຣາເອນຄົນທຳອິດແມ່ນລູກຫຼານຂອງໂນອາ. ຜູ້ຄົນເຫຼົ່ານີ້ໄດ້ຮັບພຽງລົມຫາຍໃຈຈາກພຣະເຢໂຮວາ ແລະ ມີຄວາມເຂົ້າໃຈພຽງພໍທີ່ຈະດູແລຄວາມຈຳເປັນຂັ້ນພື້ນຖານຂອງຊີວິດເທົ່ານັ້ນ, ແຕ່ພວກເຂົາບໍ່ຮູ້ວ່າພຣະເຢໂຮວາເປັນພຣະເຈົ້າແບບໃດ ຫຼື ຄວາມປະສົງຂອງພຣະອົງທີ່ມີຕໍ່ມະນຸດແນວໃດ. ໃນເມື່ອເປັນດັ່ງນັ້ນ ຈະໃຫ້ພວກເຂົາເຄົາລົບບູຊາຕໍ່ພຣະເຈົ້າຜູ້ສ້າງສັບພະທຸກສິ່ງໄດ້ແນວໃດ. ສ່ວນທີ່ວ່າມີກົດເກນ ຫຼື ມີຂໍ້ບັນຍັດຫຍັງແດ່ທີ່ຕ້ອງເຊື່ອຟັງ ຫຼື ບໍ່[ກ] ຫຼື ມີໜ້າທີ່ຫຍັງແດ່ທີ່ຜູ້ຖືກສ້າງຄວນປະຕິບັດເພື່ອພຣະຜູ້ສ້າງ, ລູກຫຼານຂອງອາດາມແມ່ນບໍ່ຮູ້ຫຍັງເລີຍກ່ຽວກັບສິ່ງເຫຼົ່ານີ້. ສິ່ງທີ່ພວກເຂົາຮູ້ຄື ຜົວຄວນສະຫຼະເຫື່ອແຮງເຮັດວຽກເພື່ອລ້ຽງດູຄອບຄົວ ແລະ ຜູ້ເປັນເມຍຄວນຖວາຍຕົນໃຫ້ກັບຜົວຂອງລາວເພື່ອສືບຕໍ່ ຂະຫຍາຍຊາດຕິພັນມະນຸດທີ່ພຣະເຢໂຮວາໄດ້ສ້າງຂຶ້ນ. ເວົ້າຢ່າງໜຶ່ງກໍຄື ຜູ້ຄົນດັ່ງກ່າວທີ່ໄດ້ຮັບແຕ່ລົມຫາຍໃຈ ແລະ ຊີວິດຈາກພຣະເຢໂຮວາ ແມ່ນບໍ່ຮູ້ໃນເລື່ອງປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ ຫຼື ຮູ້ຈັກວິທີເຮັດໃຫ້ພຣະຜູ້ເປັນເຈົ້າຂອງສັບພະທຸກສິ່ງເພິ່ງພໍໃຈ. ພວກເຂົາເຂົ້າໃຈນ້ອຍທີ່ສຸດ. ສະນັ້ນເຖິງແມ່ນວ່າ ໃນໃຈພວກເຂົາຈະບໍ່ຄົດໂກງ, ຫຼອກລວງ, ອິດສາບັງບຽດ ແລະ ຊິງດີຊິງເດັ່ນ ແຕ່ພວກເຂົາກໍຍັງບໍ່ມີຄວາມຮູ້ ຫຼື ເຂົ້າໃຈກ່ຽວກັບພຣະເຢໂຮວາ ນັ້ນກໍຄືພຣະຜູ້ເປັນເຈົ້າຂອງສັບພະທຸກສິ່ງ. ບັນພະບຸລຸດຂອງມະນຸດເຫຼົ່ານີ້ພຽງຮູ້ຈັກແຕ່ກິນ ແລະ ຊື່ນຊົມ

ກ ຂໍ້ຄວາມຕົ້ນສະບັບບໍ່ມີວະລີ “ທີ່ຕ້ອງເຊື່ອຟັງ”.

ໃນສິ່ງທີ່ພຣະເຢໂຮວາມອບໃຫ້ ແຕ່ພວກເຂົາບໍ່ຮູ້ຈັກເຄົາລົບບູຊາພຣະເຢໂຮວາ; ພວກເຂົາບໍ່ຮູ້ວ່າພຣະເຢໂຮວາຄື ພຣະເຈົ້າທີ່ພວກເຂົາຄວນຄຸເຂົ່າກົ້ມຫົວລົງບູຊາ. ສະນັ້ນຈະເອີ້ນພວກເຂົາເປັນຄົນຂອງພຣະອົງໄດ້ແນວໃດ? ເມື່ອເປັນດັ່ງນັ້ນແລ້ວ, ຄຳທີ່ວ່າ "ພຣະເຢໂຮວາແມ່ນພຣະຜູ້ເປັນເຈົ້າແຫ່ງສິ່ງຊົງສ້າງທັງປວງ" ແລະ "ພຣະອົງສ້າງມະນຸດເພື່ອວ່າມະນຸດຈະໄດ້ປະຈັກ, ສັນລະເສີນ ແລະ ເປັນຕົວແທນຂອງພຣະອົງ" ນັ້ນຈະບໍ່ເປັນຄຳເວົ້າທີ່ໄຮ້ປະໂຫຍດບໍ? ຜູ້ຄົນທີ່ບໍ່ເຄົາລົບບູຊາຕໍ່ພຣະເຢໂຮວາຈະສາມາດກາຍມາເປັນປະຈັກພະຍານໃຫ້ກັບສະຫງ່າລາສີຂອງພຣະອົງໄດ້ແນວໃດ? ຈະໃຫ້ພວກເຂົາມາເປັນການສະແດງເຖິງກຽດຕິຍົດຂອງ ພຣະອົງໄດ້ແນວໃດ? ແລ້ວຄຳກ່າວຂອງພຣະເຢໂຮວາທີ່ວ່າ "ເຮົາສ້າງມະນຸດໃນຮູບພາບຂອງເຮົາ" ແລ້ວກາຍມາເປັນອາວຸດໃນກຳມືຂອງຊາຕານຜູ້ຊົ່ວຮ້າຍບໍ? ຄຳກ່າວເຫຼົ່ານີ້ຈະບໍ່ເຮັດໃຫ້ພຣະເຢໂຮວາ ຜູ້ສ້າງມະນຸດນັ້ນອັບອາຍຂາຍໜ້າບໍ? ເພື່ອສຳເລັດຂັ້ນຕອນຂອງພາລະກິດ, ຫຼັງຈາກໄດ້ສ້າງມະນຸດເລີ່ມແຕ່ອາດາມຈົນເຖິງໂນອາ ພຣະເຢໂຮວາບໍ່ໄດ້ແນະນຳ ຫຼື ຊີ້ນຳພວກເຂົາ. ແຕ່ກົງກັນຂ້າມ ຈົນກວ່າຫລັງຈາກນໍ້າຖ້ວມໂລກ ພຣະອົງຈຶ່ງໄດ້ເລີ່ມຊີ້ນຳຊົນຊາດອິດສະຣາເອນຜູ້ທີ່ເປັນລູກຫຼານຂອງໂນອາ ແລະ ອາດາມ. ພາລະກິດຂອງພຣະອົງ ແລະ ພຣະທຳທີ່ພຣະອົງກ່າວໃນດິນແດນອິດສະຣາເອນໄດ້ຊີ້ນຳຜູ້ຄົນ ໃນດິນແດນອິດສະຣາເອນທັງໝົດ ໃນຂະນະທີ່ພວກເຂົາດຳລົງຊີວິດຂອງພວກເຂົາໃນທົ່ວດິນແດນອິດສະຣາເອນ ແລະ ດ້ວຍວິທີນີ້ກໍ່ສະແດງໃຫ້ມະນຸດເຫັນວ່າ ພຣະເຢໂຮວາບໍ່ໄດ້ເປັນພຽງຜູ້ໃຫ້ລົມຫາຍໃຈແກ່ມະນຸດເທົ່ານັ້ນ, ເພື່ອວ່າເຂົາມີຊີວິດມາຈາກພຣະອົງເປັນຊີວິດທີ່ເກີດຈາກລະອອງຝຸ່ນເຊິ່ງຖືກສ້າງໃຫ້ກາຍເປັນມະນຸດ, ແຕ່ພຣະອົງຍັງສາມາດທຳລາຍ ແລະ ສາບແຊ່ງມະນຸດ ແລະ ສາມາດນຳໃຊ້ໄມ້ຄ້ອນຂອງພຣະອົງເພື່ອປົກຄອງມະນຸດຊາດ. ພ້ອມນັ້ນ ຍັງໄດ້ສະແດງໃຫ້ມະນຸດເຫັນວ່າພຣະເຢໂຮວາ ສາມາດນຳພາຊີວິດຂອງມະນຸດເທິງແຜ່ນດິນໂລກ ແລະ ກ່າວພຣະຄຳ ແລະ ປະຕິບັດຕໍ່ມະນຸດທັງຫຼາຍອີງຕາມເວລາຂອງກາງເວັນ ແລະ ກາງຄືນ. ພາລະກິດທີ່ພຣະອົງແມ່ນພຽງແຕ່ເພື່ອໃຫ້ສິ່ງທີ່ພຣະອົງສ້າງໄດ້ຮູ້ວ່າ ມະນຸດມາຈາກຂີ້ຝຸ່ນທີ່ພຣະອົງເກັບຂຶ້ນມາ ແລະ ຍິ່ງໄປກວ່ານັ້ນ ມະນຸດແມ່ນຖືກສ້າງຂຶ້ນໂດຍພຣະອົງເອງ. ບໍ່ພຽງເທົ່ານີ້ ແຕ່ພຣະອົງປະຕິບັດພາລະກິດໃນອິດສະຣາເອນກ່ອນເພື່ອໃຫ້ຜູ້ຄົນ ແລະ ຊາດຕ່າງໆ (ຕາມຄວາມຈິງແລ້ວ ຊາດຕ່າງໆທີ່ວ່ານີ້ບໍ່ແມ່ນຕ່າງຊາດຈາກອິດສະຣາເອນ ແຕ່ກົງກັນຂ້າມພວກເຂົາແມ່ນແຍກອອກມາຈາກຊົນຊາດອິດສະຣາເອນ ແລະ ຍັງເປັນລູກຫຼານຂອງອາດາມ ແລະ ເອວາຄືເກົ່າ) ໄດ້ຮັບຂ່າວປະເສີດຂອງພຣະເຢໂຮວາຈາກດິນແດນອິດສະຣາເອນ ເພື່ອມະນຸດທີ່ຖືກສ້າງຂຶ້ນທັງໝົດໃນຈັກກະວານຈະໄດ້ເຄົາລົບບູຊາພຣະເຢໂຮວາ ແລະ ຍົກພຣະອົງຂຶ້ນເປັນອົງທີ່ຍິ່ງໃຫຍ່. ຖ້າພຣະເຢໂຮວາບໍ່ໄດ້ເລີ່ມຕົ້ນພາລະກິດຂອງພຣະອົງໃນດິນແດນອິດສະຣາເອນ, ແຕ່ກົງກັນຂ້າມ ຫລັງຈາກສ້າງມະນຸດແລ້ວປ່ອຍໃຫ້ພວກເຂົາໃຊ້ຊີວິດຢ່າງເປັນອິດສະຫຼະເທິງແຜ່ນດິນໂລກ. ຖ້າເປັນດັ່ງນັ້ນ, ດ້ວຍວ່າ ທຳມະຊາດຮ່າງກາຍຂອງມະນຸດ (ທຳມະຊາດໝາຍເຖິງວ່າ ມະນຸດຈະບໍ່ສາມາດຮູ້ຈັກສິ່ງທີ່ຕົນເອງບໍ່ສາມາດເຫັນເຊິ່ງເວົ້າໄດ້ອີກວ່າ ຕົນເອງຈະບໍ່ຮູ້ວ່າ ພຣະເຢໂຮວາຄືຜູ້ສ້າງມະນຸດ ແລະ ບໍ່ຮູ້ວ່າພຣະອົງສ້າງເພື່ອຫຍັງ) ມະນຸດຈະບໍ່ມີທາງຮູ້ວ່າ ພຣະເຢໂຮວາເປັນຜູ້ສ້າງມະນຸດ ຫຼື ພຣະອົງຄືພຣະຜູ້ເປັນເຈົ້າຂອງສັບພະສິ່ງ

ທັງປວງ. ຖ້າພຣະເຢໂຮວາໄດ້ສ້າງມະນຸດ ແລ້ວປ່ອຍປະພວກເຂົາໄວ້ເທິງແຜ່ນດິນໂລກ ແລະ ພຽງແຕ່ປັດມື ແລະ ຈາກໄປ, ແທນທີ່ພຣະອົງຈະຢູ່ກັບມະນຸດ ເພື່ອຊີ້ນຳພວກເຂົາໃນໄລຍະເວລາໜຶ່ງ; ແລ້ວມະນຸດຊາດທັງປວງກໍຈະກັບໄປສູ່ຄວາມວ່າງເປົ່າເໝືອນເດີມ; ແມ່ນແຕ່ ສະຫວັນ, ແຜ່ນດິນໂລກ ແລະ ສັບພະສິ່ງທັງປວງທີ່ພຣະອົງສ້າງ ແລະ ມວນມະນຸດຊາດ ກໍຈະກັບຄືນໄປສູ່ຄວາມວ່າງເປົ່າ ແລະ ຍິ່ງໄປກວ່ານັ້ນ ຈະຖືກຢຽບຢ່ຳທຳລາຍໂດຍຊາຕານ. ໃນວິທີນີ້ ພຣະເຢໂຮວາຫວັງວ່າ: “ເທິງແຜ່ນດິນໂລກ ນັ້ນກໍຄື ໃນທ່າມກາງຂອງການເນລະມິດສ້າງຂອງພຣະອົງ ພຣະອົງຄວນຈະມີບ່ອນຢືນທີ່ເປັນສະຖານທີ່ສັກສິດ” ກໍຈະຖືກທຳລາຍໝົດສິ້ນ. ສະນັ້ນ, ຫລັງຈາກການເນລະມິດສ້າງມະນຸດແລ້ວ ພຣະອົງໄດ້ຢູ່ໃນທ່າມ ກາງມະນຸດເພື່ອຊີ້ນຳພວກເຂົາໃນການດຳລົງຊີວິດ ແລະ ກ່າວຕໍ່ມະນຸດໃນທ່າມກາງພວກເຂົາ, ທັງໝົດນີ້ແມ່ນເພື່ອບັນລຸຄວາມປະສົງຂອງພຣະອົງ ແລະ ແຜນການຂອງພຣະອົງ. ພາລະກິດທີ່ພຣະອົງໄດ້ກະທຳໃນດິນແດນອິດສະຣາເອນແມ່ນເພື່ອປະຕິບັດແຜນການທີ່ພຣະອົງໄດ້ວາງໄວ້ກ່ອນການເນລະມິດສ້າງສັບພະທຸກສິ່ງທັງປວງຂອງພຣະອົງ ແລະ ດັ່ງນັ້ນ ການປະຕິບັດພາລະກິດທຳອິດໃນທ່າມກາງຊົນຊາດອິດສະຣາເອນ ແລະ ການເນລະມິດສ້າງສັບພະສິ່ງທັງປວງຂອງພຣະອົງແມ່ນບໍ່ໄດ້ຂັດແຍ້ງກັນ ແຕ່ທັງສອງຢ່າງແມ່ນຖືກປະຕິບັດເພື່ອການຄຸ້ມຄອງຂອງພຣະອົງ, ເພື່ອພາລະກິດ, ຄວາມສະຫງ່າລາສີ ແລະ ຖືກປະຕິບັດເພື່ອການສ້າງມະນຸດຂອງພຣະອົງໃຫ້ມີຄວາມໝາຍຢ່າງເລິກເຊິ່ງ. ຫລັງຈາກໂນອາ ພຣະອົງໄດ້ນຳພາຊີວິດຂອງມະນຸດເທິງແຜ່ນດິນໂລກເປັນເວລາສອງພັນປີ ເຊິ່ງໃນໄລຍະນັ້ນພຣະອົງໄດ້ສິດສອນມະນຸດໃຫ້ເຂົ້າໃຈເຖິງວິທີເຄົາລົບບູຊາພຣະເຢໂຮວາ ທີ່ເປັນພຣະຜູ້ເປັນເຈົ້າຂອງສັບພະສິ່ງທັງປວງ, ສິດສອນວິທີປະຕິບັດຕໍ່ຊີວິດຂອງຕົນ, ວິທີດຳເນີນຊີວິດ ແລະ ສຳຄັນທີ່ສຸດ ວິທີປະຕິບັດໃນການເປັນພະຍານຕໍ່ພຣະເຢໂຮວາ; ວິທີການຖວາຍຄວາມເຊື່ອຟັງໃຫ້ກັບພຣະອົງ, ມອບຄວາມເຄົາລົບບູຊາໃຫ້ແດ່ພຣະອົງ ແລະ ພ້ອມທັງການສັນລະເສີນພຣະອົງດ້ວຍດົນຕີເໝືອນດັ່ງເດວິດ ແລະ ກຸ່ມມະຫາປະໂລຫິດຂອງລາວໄດ້ກະທຳ.

ກ່ອນໄລຍະສອງພັນປີ ເຊິ່ງເປັນໄລຍະທີ່ພຣະເຢໂຮວາໄດ້ກະທຳພາລະກິດຂອງພຣະອົງ, ມະນຸດແມ່ນບໍ່ຮູ້ຈັກຫຍັງ ແລະ ມະນຸດຊາດເກືອບທັງໝົດໄດ້ຕົກຢູ່ໃນຄວາມຊົ່ວຮ້າຍ ຈົນເຖິງກ່ອນການທຳລາຍໂລກດ້ວຍອຸທົກກະໄພ ພວກເຂົາໄດ້ໄປເຖິງຈຸດໄຮ້ສິນທຳ ແລະ ຄວາມຊົ່ວຊ້າທີ່ສຸດ ເຊິ່ງໃນຫົວໃຈຂອງພວກເຂົາແມ່ນຂາດພຣະເຢໂຮວາຢ່າງສິ້ນເຊີງ ແລະ ແຮງຕ້ອງການວິທີທາງຂອງພຣະອົງ. ພວກເຂົາບໍ່ເຄີຍເຂົ້າໃຈພາລະກິດທີ່ພຣະເຢໂຮວາຈະກະທຳ; ພວກເຂົາຂາດເຫດຜົນ, ຍິ່ງໄປກວ່ານັ້ນພວກເຂົາຂາດຄວາມຮູ້ ເໝືອນດັ່ງເຄື່ອງຈັກທີ່ຫາຍໃຈ ແຕ່ໄຮ້ຄວາມຮູ້ຢ່າງເລິກເຊິ່ງກ່ຽວກັບມະນຸດ, ພຣະເຈົ້າ, ໂລກ, ຊີວິດ ແລະ ອື່ນໆອີກ. ໃນແຜ່ນດິນໂລກ ພວກເຂົາປະພຶດໃນການຫຼອກລວງຕ່າງໆນາໆຄືກັນກັບງູ ແລະ ເວົ້າຈາຫຼາຍສິ່ງຢ່າງທີ່ເຮັດໃຫ້ພຣະເຢໂຮວາບໍ່ພໍໃຈ, ແຕ່ເນື່ອງຈາກວ່າ ພວກເຂົາເປັນຄົນໄຮ້ດຽງສາ ພຣະເຢໂຮວາຈຶ່ງບໍ່ລົງໂທດ ແລະ ຕີສອນພວກເຂົາ. ຈົນກວ່າຫລັງຈາກອຸທົກກະໄພ, ເມື່ອໂນອາໄດ້ອາຍຸ 601 ປີ ພຣະເຢໂຮວາຈຶ່ງປາກົດຕໍ່ໂນອາ, ຊີ້ນຳລາວ ແລະ ຄອບຄົວຂອງລາວ; ພຣະອົງນຳພາຝູງນົກ ແລະ ສັດປ່າ ທີ່ລອດພົ້ນຈາກອຸທົກກະໄພພ້ອມດ້ວຍໂນອາ ແລະ ລູກຫຼານຂອງ

ລາວຈົນກວ່າການສິ້ນສຸດຂອງຍຸກແຫ່ງພຣະບັນຍັດ ເຊິ່ງກິນເວລາທັງໝົດ 2.500 ປີ. ພຣະອົງດຳເນີນພາລະກິດໃນອິດສະຣາເອນ ເຊິ່ງນັ້ນກໍຄື ການດຳເນີນພາລະກິດຢ່າງເປັນທາງການ ໂດຍເປັນເວລາທັງໝົດ 2.000 ປີ ແລະ ດຳເນີນພາລະກິດຢ່າງຕໍ່ເນື່ອງໃນ ແລະ ນອກອິດສະຣາເອນເປັນເວລາ 500 ປີ ເຊິ່ງລວມກັນເປັນ 2.500 ປີ. ໃນໄລລະນີ້, ພຣະອົງໄດ້ສັ່ງຊົນຊາດອິດສະຣາເອນວ່າ ຖ້າຈະຮັບໃຊ້ພຣະເຢໂຮວາ ພວກເຂົາຄວນສ້າງວິຫານ, ໃສ່ເຄື່ອງນຸ່ງແບບປະໂລຫິດ ແລ້ວຍ່າງຕີນເປົ່າເຂົ້າສູ່ວິຫານໃນຍາມຮຸ່ງເຊົ້າ, ດ້ວຍວ່າພວກເຂົາຢ້ານເກີບຂອງພວກເຂົາຈະເຮັດໃຫ້ວິຫານເປິເປື້ອນ ແລະ ຢ້ານແປວໄຟຈາກຍອດວິຫານພຸລົງໃສ່ພວກເຂົາ ແລະ ເຜົາໄໝ້ພວກເຂົາຈົນຕາຍ. ພວກເຂົາຈຶ່ງປະຕິບັດຕາມໜ້າທີ່ຂອງພວກເຂົາ ແລະ ອ່ອນນ້ອມຍອມຮັບເອົາແຜນການຂອງພຣະເຢໂຮວາ. ພວກເຂົາອະທິຖານເຖິງພຣະເຢໂຮວາໃນວິຫານ ແລະ ຫລັງຈາກໄດ້ຮັບຄວາມເປີດເຜີຍຂອງພຣະເຢໂຮວາ ນັ້ນກໍຄື ຫຼັງຈາກພຣະເຢໂຮວາໄດ້ກ່າວຕໍ່ພວກເຂົາເປັນຈຳນວນຫຼວງຫຼາຍ ແລະ ສັ່ງສອນພວກເຂົາໃຫ້ພວກເຂົາສະແດງຄວາມເຄົາລົບຕໍ່ພຣະເຢໂຮວາຜູ້ທີ່ເປັນພຣະເຈົ້າຂອງພວກເຂົາ. ພຣະເຢໂຮວາໄດ້ບອກພວກເຂົາວ່າພວກເຂົາຄວນສ້າງວິຫານ ແລະ ແທ່ນບູຊາ ແລະ ໃນວັນປັດສະຄາ ເຊິ່ງໃນເວລານັ້ນໄດ້ກຳນົດຂຶ້ນໂດຍພຣະເຢໂຮວາ, ພວກເຂົາຄວນຈັດຫາງົວເກີດໃໝ່ ແລະ ແກະ ແລ້ວນຳເອົາມາວາງໃສ່ເທິງແທ່ນບູຊາເພື່ອຖວາຍແດ່ພຣະເຢໂຮວາ, ນັ້ນກໍເພື່ອເປັນການບັງຄັບພວກເຂົາ ແລະ ເຮັດໃຫ້ຫົວໃຈຂອງພວກເຂົາມີຄວາມເຄົາລົບຕໍ່ພຣະເຢໂຮວາ. ສ່ວນວ່າ ພວກເຂົາໄດ້ເຊື່ອຟັງກົດບັນຍັດນີ້ ຫຼື ບໍ່ ນັ້ນ ແມ່ນຂຶ້ນຢູ່ກັບຄວາມຈົງຮັກພັກດີຂອງພວກເຂົາທີ່ມີຕໍ່ພຣະເຢໂຮວາ. ພ້ອມນີ້ ພຣະເຢໂຮວາໄດ້ກຳນົດວັນຊະບາໂຕໃຫ້ພວກເຂົາ ເຊິ່ງເປັນວັນທີ່ເຈັດຂອງການເນລະມິດສ້າງຂອງພຣະອົງ. ຫລັງຈາກວັນຊະບາໂຕ ພຣະອົງໄດ້ສ້າງວັນທຳອິດ ເປັນວັນສຳລັບພວກເຂົາສັນລະເສີນພຣະເຢໂຮວາ ເພື່ອຖວາຍບູຊາ ແລະ ເສບດົນຕີແດ່ພຣະອົງຟັງ. ໃນວັນນີ້ ພຣະເຢໂຮວາໄດ້ຮຽກເຊີນມະຫາປະໂລຫິດທຸກຄົນເຂົ້າຮ່ວມ ເພື່ອແບ່ງປັນສິ່ງຂອງທີ່ນຳມາຖວາຍ ຢູ່ເທິງແທ່ນບູຊານັ້ນໃຫ້ຜູ້ຄົນກິນ ເພື່ອພວກເຂົາຈະໄດ້ຊື່ນຊົມກັບສິ່ງທີ່ນຳມາຖວາຍໃຫ້ແດ່ພຣະເຢໂຮວາ ແລະ ຫລັງຈາກນັ້ນ ພຣະເຢໂຮວາໄດ້ກ່າວບອກພວກເຂົາວ່າ ພວກເຂົາໄດ້ຮັບພອນແລ້ວ, ພວກເຂົາໄດ້ຮັບສ່ວນແບ່ງປັນຈາກພຣະອົງ ແລະ ພວກເຂົາໄດ້ເປັນຄົນທີ່ພຣະອົງເລືອກ (ເຊິ່ງເປັນຄຳສັນຍາຂອງພຣະອົງກັບຊົນຊາດອິດສະຣາເອນ). ຍ້ອນເຫດນີ້, ຈົນເຖິງທຸກວັນນີ້ ຊົນຊາດອິດສະຣາເອນຍັງເວົ້າຢູ່ວ່າ ພຣະເຢໂຮວາຄືພຣະເຈົ້າຂອງພວກເຂົາເທົ່ານັ້ນ ແລະ ບໍ່ແມ່ນພຣະເຈົ້າຂອງຄົນຕ່າງຊາດ.

ໃນໄລຍະຍຸກແຫ່ງພຣະບັນຍັດ, ພຣະເຢໂຮວາໄດ້ວາງຂໍ້ບັນຍັດຫຼາຍຂໍ້ໃຫ້ກັບໂມເຊ ເພື່ອນຳໄປໃຊ້ກັບຊົນຊາດອິດສະຣາເອນຜູ້ທີ່ຕິດຕາມລາວອອກຈາກອີຢິບ. ພຣະບັນຍັດເຫຼົ່ານີ້ແມ່ນພຣະເຢໂຮວາໄດ້ມອບໃຫ້ຊົນຊາດອິດສະຣາເອນ ແລະ ບໍ່ມີສ່ວນກ່ຽວຂ້ອງໃດໆກັບຊົນຊາດອີຢິບ; ພຣະບັນຍັດແມ່ນຖືກວາງອອກເພື່ອຄວບຄຸມຊົນຊາດອິດສະຣາເອນ ແລະ ພຣະເຈົ້າໄດ້ນຳໃຊ້ພຣະບັນຍັດເພື່ອຮຽກຮ້ອງຈາກພວກເຂົາ. ບໍ່ວ່າພວກເຂົາຈະນັບຖືວັນຊະບາໂຕ ຫຼື ພວກເຂົາຈະບູຊາພະທຽມ ແລະ ອື່ນໆອີກ, ສິ່ງເຫຼົ່ານີ້ແມ່ນຫຼັກການຂອງການຕັດສິນຄວາມບາບ ຫຼື ຄວາມຊອບທຳຂອງພວກເຂົາ. ໃນບັນດາພວກເຂົາ ຈະມີຜູ້ຄົນທີ່ຖືກເຜົາໄໝ້ ດ້ວຍໄຟຂອງພຣະເຢໂຮວາ, ບາງຄົນຖືກລົງໂທດດ້ວຍການແກວ່ງ

ໝາກຫີນໃສ່ຈົນຕາຍ ແລະ ບາງຄົນໄດ້ຮັບພອນຈາກພຣະເຢໂຮວາ. ສິ່ງນີ້ຖືກກຳນົດຂຶ້ນອີງຕາມວ່າ ພວກເຂົາເຊື່ອຟັງ ກົດພຣະບັນຍັດເຫຼົ່ານີ້ຫຼືບໍ່. ຜູ້ທີ່ບໍ່ນັບຖືວັນຊະບາໂຕແມ່ນຖືກລົງໂທດ ດ້ວຍການແກວ່ງໝາກຫີນໃສ່ຈົນຕາຍ. ປະໂລຫິດທີ່ບໍ່ນັບຖືວັນຊະບາໂຕແມ່ນຖືກເຜົາໄໝ້ດ້ວຍໄຟຂອງພຣະເຢໂຮວາ. ຜູ້ທີ່ບໍ່ສະແດງຄວາມເຄົາລົບຕໍ່ພໍ່ແມ່ແມ່ນຖືກລົງໂທດດ້ວຍການແກວ່ງໝາກຫີນໃສ່ຈົນຕາຍເຊັ່ນດຽວກັນ. ທັງໝົດນີ້ຖືກຍົກຍ້ອງໂດຍພຣະເຢໂຮວາ. ພຣະເຢໂຮວາໄດ້ສ້າງຕັ້ງກົດບັນຍັດ ແລະ ກົດໝາຍຂອງພຣະອົງ ກໍຍ້ອນວ່າ ໃນຂະນະທີ່ພຣະອົງນຳພາຊີວິດຂອງພວກເຂົານັ້ນ ພວກເຂົາຈະໄດ້ຮັບຟັງ ແລະ ເຊື່ອຟັງພຣະທຳຂອງພຣະອົງ ແລະ ຈະບໍ່ຕໍ່ຕ້ານພຣະອົງ. ພຣະອົງໃຊ້ກົດບັນຍັດເຫຼົ່ານີ້ເພື່ອຄວບຄຸມເຊື້ອຊາດມະນຸດທີ່ກຳລັງເກີດໃໝ່ ແລະ ເພື່ອປູພື້ນຖານສຳລັບການດຳເນີນພາລະກິດຂອງພຣະອົງໃນອະນາຄົດ. ສະນັ້ນ ພາລະກິດທີ່ພຣະເຢໂຮວາກະທຳໃນຍຸກທຳອິດຈຶ່ງເອີ້ນວ່າ ຍຸກແຫ່ງພຣະບັນຍັດ. ເຖິງແມ່ນວ່າ ພຣະເຢໂຮວາໄດ້ສ້າງພຣະທຳຫຼາຍຂໍ້ ແລະ ໄດ້ກະທຳພາລະກິດຫຼາຍຢ່າງ ພຣະອົງພຽງຊີ້ນຳຜູ້ຄົນໄປໃນທາງບວກ, ສິດສອນຜູ້ຄົນທີ່ໄຮ້ດຽງສາເຫຼົ່ານີ້ໃຫ້ຮຽນຮູ້ເຖິງວິທີການເປັນມະນຸດ, ວິທີການດຳລົງຊີວິດ ແລະ ການເຂົ້າໃຈວິທີທາງຂອງພຣະເຢໂຮວາ. ສ່ວນໃຫຍ່ ພາລະກິດທີ່ພຣະອົງກະທຳແມ່ນ ເພື່ອໃຫ້ຜູ້ຄົນນັບຖືວິທີທາງຂອງພຣະອົງ ແລະ ປະຕິບັດຕາມກົດບັນຍັດຂອງພຣະອົງ. ພາລະກິດໄດ້ປະຕິບັດກັບຜູ້ຄົນທີ່ຊົ່ວຮ້າຍພຽງເລັກນ້ອຍ ເຊິ່ງບໍ່ໄດ້ຂະຫຍາຍໄປເຖິງການປ່ຽນແປງຈິດໃຈ ຫຼື ຄວາມກ້າວໜ້າໃນຊີວິດຂອງພວກເຂົາ. ພຣະອົງເນັ້ນໃນເລື່ອງໃຊ້ພຣະບັນຍັດເພື່ອກົດກັ້ນ ແລະ ຄວບຄຸມຜູ້ຄົນ. ສຳລັບຊົນຊາດອິດສະຣາເອນໃນເວລານັ້ນ ພຣະເຢໂຮວາແມ່ນເປັນພຽງພຣະເຈົ້າໃນພຣະວິຫານ ແລະ ພຣະເຈົ້າໃນສະຫວັນເທົ່ານັ້ນ. ພຣະອົງເປັນເສົາເມກ ແລະ ເສົາໄຟ. ສິ່ງທີ່ພຣະເຢໂຮວາຕ້ອງການຈາກພວກເຂົາກໍຄືການເຊື່ອຟັງໃນສິ່ງທີ່ຜູ້ຄົນໃນມື້ນີ້ຮູ້ຈັກດີ ນັ້ນກໍຄື ກົດໝາຍ ແລະ ພຣະບັນຍັດ ເຊິ່ງອາດເວົ້າໄດ້ອີກວ່າເປັນກົດເກນ. ເນື່ອງຈາກວ່າສິ່ງທີ່ພຣະເຢໂຮວາໄດ້ກະທຳນັ້ນບໍ່ແມ່ນເພື່ອປ່ຽນແປງພວກເຂົາ ແຕ່ເພື່ອບັນດານພວກເຂົາໃຫ້ມີສິ່ງທີ່ມະນຸດຄວນມີ ແລະ ເພື່ອສັ່ງສອນພວກເຂົາຈາກປາກຂອງພຣະອົງ ເພາະວ່າຫຼັງຈາກຖືກສ້າງແລ້ວ ມະນຸດບໍ່ມີສິ່ງທີ່ເຂົາຄວນມີ. ສະນັ້ນພຣະເຢໂຮວາຈຶ່ງບັນດານຜູ້ຄົນໃຫ້ມີສິ່ງທີ່ພວກເຂົາຄວນມີເພື່ອປະກອບເຂົ້າ ໃນການດຳລົງຊີວິດຂອງພວກເຂົາໃນແຜ່ນດິນໂລກນີ້, ເຮັດໃຫ້ ຜູ້ຄົນທີ່ພຣະອົງນຳພາມີຖານະດີກວ່າບັນພະບຸລຸດຂອງພວກເຂົານັ້ນກໍຄື ອາດາມ ແລະ ເອວາ, ຍ້ອນວ່າສິ່ງພຣະເຢໂຮວາໄດ້ມອບໃຫ້ພວກເຂົາແມ່ນດີກວ່າ ສິ່ງທີ່ພຣະອົງໄດ້ມອບໃຫ້ອາດາມ ແລະ ເອວາໃນເບື້ອງຕົ້ນ. ແນວໃດກໍຕາມ ພາລະກິດທີ່ພຣະເຢໂຮວາກະທຳໃນດິນແດນອິດສະຣາເອນ ແມ່ນເປັນພຽງການຊີ້ນຳມະນຸດຊາດ ແລະ ເຮັດໃຫ້ມະນຸດຮັບຮູ້ພຣະຜູ້ສ້າງຂອງພວກເຂົາ. ພຣະອົງບໍ່ໄດ້ເອົາຊະນະ ຫຼື ປ່ຽນແປງພວກເຂົາ ແຕ່ພຽງຊີ້ນຳພວກເຂົາ. ນີ້ຄື ຜົນລວມຂອງພາລະກິດຂອງພຣະເຢໂຮວາໃນຍຸກແຫ່ງພຣະບັນຍັດ. ມັນເປັນເບື້ອງຫຼັງ, ເປັນເລື່ອງຈິງ, ເປັນໃຈຄວາມຂອງພາລະກິດຂອງພຣະອົງໃນທົ່ວແຜ່ນດິນຂອງອິດສະຣາເອນ ແລະ ເປັນການເລີ່ມຕົ້ນພາລະກິດຫົກພັນປີຂອງພຣະອົງ ເພື່ອເຮັດໃຫ້ມະນຸດຢູ່ພາຍໃຕ້ການຄວບຄຸມຂອງພຣະເຢໂຮວາ. ຜົນຈາກພາລະກິດດັ່ງກ່າວເຮັດໃຫ້ເກີດມີພາລະກິດ ເພີ່ມຂຶ້ນໃນແຜນ ການຄຸ້ມຄອງຫົກພັນປີຂອງພຣະອົງ.

# ເລື່ອງຈິງທີ່ຢູ່ເບື້ອງຫຼັງພາລະກິດ ໃນຍຸກແຫ່ງການໄຖ່ບາບ

ແຜນການຄຸ້ມຄອງທັງຫມົດຂອງເຮົາ, ແຜນການທີ່ກວມເອົາຫົກພັນປີ, ປະກອບດ້ວຍສາມໄລຍະ ຫຼື ສາມຍຸກ: ຍຸກແຫ່ງພຣະບັນຍັດໃນເບື້ອງຕົ້ນ, ຍຸກແຫ່ງພຣະຄຸນ (ເຊິ່ງແມ່ນຍຸກຂອງການໄຖ່ບາບ) ແລະ ຍຸກແຫ່ງອານາຈັກໃນຍຸກສຸດທ້າຍ. ການເຮັດພາລະກິດຂອງເຮົາໃນສາມຍຸກນີ້ ແຕກຕ່າງກັນໃນເນື້ອຫາຕາມທຳມະຊາດຂອງແຕ່ລະຍຸກ, ແຕ່ໃນແຕ່ລະຂັ້ນຕອນແມ່ນສອດຄ່ອງກັບຄວາມຕ້ອງການຂອງມະນຸດ ຫຼື ເວົ້າຢ່າງຊັດເຈນກໍຄື ມັນຖືກສ້າງຂຶ້ນເພື່ອໃຫ້ທຽບທັນກັບກົນລະຍຸດທີ່ຊາຕານໃຊ້ໃນສົງຄາມທີ່ເຮົາຕໍ່ສູ້ກັບມັນ. ຈຸດປະສົງຂອງພາລະກິດຂອງເຮົາແມ່ນເພື່ອເອົາຊະນະຊາຕານ, ເພື່ອສະແດງໃຫ້ເຫັນເຖິງ ສະຕິປັນຍາ ແລະ ອຳນາດອັນຍິ່ງໃຫຍ່ຂອງເຮົາ, ເພື່ອເປີດເຜີຍກົນລະຍຸດທຸກຢ່າງຂອງຊາຕານ ແລະ ເພື່ອຊ່ວຍເຊື້ອຊາດມະນຸດທັງໝົດໃຫ້ລອດພົ້ນ ເຊິ່ງດຳລົງຊີວິດຢູ່ພາຍໃຕ້ການຄວບຄຸມຂອງມັນ. ມັນເປັນການສະແດງໃຫ້ເຫັນເຖິງສະຕິປັນຍາ ແລະ ອຳນາດອັນຍິ່ງໃຫຍ່ຂອງເຮົາ ໃນຂະນະດຽວກັນ ເປີດເຜີຍໃຫ້ເຫັນເຖິງຄວາມຫນ້າກຽດຊັງທີ່ບໍ່ສາມາດທົນຕໍ່ໄປໄດ້ຂອງຊາຕານ. ຍິ່ງໄປກວ່ານັ້ນ ມັນເປັນການສິດສອນຕໍ່ສິ່ງທີ່ເຮົາສ້າງຂຶ້ນມາເພື່ອໃຫ້ຮູ້ຈັກໃຈ້ແຍກລະຫວ່າງຄວາມດີ ແລະ ຄວາມຊົ່ວ, ເພື່ອໃຫ້ຮູ້ວ່າເຮົາເປັນຜູ້ປົກຄອງທຸກສິ່ງ, ເພື່ອໃຫ້ເຫັນຢ່າງແຈ່ມແຈ້ງວ່າຊາຕານແມ່ນສັດຕູຂອງມະນຸດ, ເປັນສິ່ງທີ່ຕໍ່າສຸດຂອງຄວາມຕໍ່າ, ສິ່ງຊົ່ວຮ້າຍ ແລະ ເພື່ອບອກເຖິງຄວາມແນ່ນອນແທ້ຈິງ, ຄວາມແຕກຕ່າງລະຫວ່າງຄວາມດີ ແລະ ຄວາມຊົ່ວຮ້າຍ, ຄວາມຈິງ ແລະ ຄວາມບໍ່ຖືກຕ້ອງ, ຄວາມບໍລິສຸດ ແລະ ຄວາມເປິເປື້ອນ ແລະ ແມ່ນຫຍັງເປັນສິ່ງທີ່ຍິ່ງໃຫຍ່ ແລະ ແມ່ນຫຍັງເປັນສິ່ງທີ່ໄຮ້ກຽດສັກສີ. ດ້ວຍວິທີນີ້, ມວນມະນຸດຊາດທີ່ຂາດສະຕິປັນຍາຈະສາມາດເປັນພະຍານໃຫ້ເຮົາວ່າມັນບໍ່ແມ່ນເຮົາເປັນຜູ້ເຮັດໃຫ້ມວນມະນຸດເສື່ອມໂຊມ ແລະ ມີພຽງແຕ່ເຮົາ ນັ້ນກໍຄືພຣະຜູ້ສ້າງໂລກສາມາດຊ່ວຍມວນມະນຸດຊາດໃຫ້ພົ້ນໄດ້, ສາມາດສະໜອງສັບພະສິ່ງໃຫ້ມວນມະນຸດເພື່ອໃຫ້ເກີດຄວາມສຸກແກ່ພວກເຂົາ; ແລະ ພວກເຂົາຈະຮັບຮູ້ວ່າ ເຮົາເປັນຜູ້ປົກຄອງທຸກສິ່ງ ແລະ ຊາຕານເປັນພຽງແຕ່ຫນຶ່ງໃນຊີວິດທີ່ເຮົາສ້າງຂຶ້ນ ເຊິ່ງຕໍ່ມາມັນຫັນມາຕໍ່ຕ້ານເຮົາ. ແຜນການຄຸ້ມຄອງຫົກພັນປີຂອງເຮົາຖືກແບ່ງອອກເປັນສາມໄລຍະ ເພື່ອບັນລຸຜົນຮັບ ດັ່ງຕໍ່ໄປນີ້: ເພື່ອເຮັດໃຫ້ການສ້າງຂອງເຮົາກາຍເປັນພະຍານຝ່າຍເຮົາ, ເພື່ອໃຫ້ພວກເຂົາເຂົ້າໃຈຄວາມປະສົງຂອງເຮົາ ແລະ ຮູ້ວ່າເຮົາຄືຄວາມຈິງ. ດັ່ງນັ້ນ, ໃນລະຫວ່າງໄລຍະທຳອິດຂອງການປະຕິບັດພາລະກິດໃນແຜນການຄຸ້ມຄອງຫົກພັນປີຂອງເຮົານັ້ນ ເຮົາໄດ້ປະຕິບັດພາລະກິດກ່ຽວກັບພຣະບັນຍັດ ເຊິ່ງເປັນພາລະກິດທີ່ພຣະເຢໂຮວານຳພາສາວົກຂອງພຣະອົງ. ໄລຍະທີ່ສອງເລີ່ມຕົ້ນພາລະກິດຂອງຍຸກແຫ່ງພຣະຄຸນໃນຫມູ່ບ້ານຢູດາຍ. ພຣະເຢຊູເປັນຕົວແທນພາລະກິດທັງຫມົດຂອງຍຸກແຫ່ງພຣະຄຸນ; ພຣະອົງໄດ້ບັງເກີດເປັນມະນຸດ ແລະ ຖືກຄຶງເທິງໄມ້ກາງແຂນ ແລະ ພຣະອົງໄດ້ເປີດຍຸກແຫ່ງພຣະຄຸນ. ພຣະອົງໄດ້ຖືກຄຶງໄວ້ເທິງໄມ້ກາງແຂນເພື່ອເຮັດສຳເລັດພາລະກິດຂອງການໄຖ່ບາບ, ເພື່ອສິ້ນສຸດຍຸກແຫ່ງພຣະບັນຍັດ ແລະ ເລີ່ມຕົ້ນຍຸກແຫ່ງ

ພຣະຄຸນ ແລະ ດັ່ງນັ້ນພຣະອົງຈຶ່ງຖືກເອີ້ນວ່າ "ຜູ້ບັນຊາສູງສຸດ", "ຜູ້ຮັບບາບ", "ຜູ້ໄຖ່ບາບ". ດັ່ງນັ້ນ ພາລະກິດຂອງພຣະເຢຊູແຕກຕ່າງກັນທາງດ້ານເນື້ອໃນຈາກພາລະກິດຂອງພຣະເຢໂຮວາ, ເຖິງແມ່ນວ່າ ພາລະກິດທັງສອງໃຊ້ຫຼັກການດຽວກັນ. ພຣະເຢໂຮວາໄດ້ເລີ່ມຕົ້ນຍຸກແຫ່ງພຣະບັນຍັດ, ໄດ້ສ້າງ ພື້ນຖານ ເຊິ່ງເປັນຕົ້ນກຳເນີດຂອງພາລະກິດຂອງພຣະອົງໃນແຜ່ນດິນໂລກ ແລະ ໄດ້ອອກກົດລະບຽບ ແລະ ພຣະບັນຍັດ; ສອງສິ່ງເຫຼົ່ານີ້ແມ່ນ ຜົນສຳເລັດຂອງພຣະອົງ ເຊິ່ງເປັນຕົວແທນຂອງຍຸກແຫ່ງ ພຣະບັນຍັດ. ພາລະກິດຂອງພຣະເຢຊູໃນຍຸກແຫ່ງພຣະຄຸນບໍ່ແມ່ນເພື່ອອອກຂໍ້ກົດລະບຽບ ແຕ່ເພື່ອ ປະຕິບັດຕາມຂໍ້ບັນຍັດ, ດັ່ງນັ້ນ ພາລະກິດຂອງພຣະອົງຈຶ່ງນຳໄປສູ່ຍຸກແຫ່ງພຣະຄຸນ ແລະ ສິ້ນສຸດຍຸກ ແຫ່ງພຣະບັນຍັດ ທີ່ໃຊ້ເວລາເຖິງສອງພັນປີ. ພຣະອົງເປັນຜູ້ບຸກເບີກ ແລະ ສະເດັດມາເພື່ອເລີ່ມຕົ້ນຍຸກ ແຫ່ງພຣະຄຸນ, ແຕ່ພາກສ່ວນຕົ້ນຕໍຂອງພາລະກິດພຣະອົງນັ້ນແມ່ນການໄຖ່ບາບ. ດັ່ງນັ້ນ ຜົນສຳເລັດ ຂອງພຣະອົງມີສອງຢ່າງຄື: ເປີດຍຸກໃໝ່ ແລະ ສຳເລັດພາລະກິດໄຖ່ບາບຜ່ານການຖືກຄຶງໃສ່ໄມ້ ກາງແຂນຂອງພຣະອົງ. ຫຼັງຈາກນັ້ນ, ພຣະອົງກໍ່ໄດ້ຈາກໄປ. ແລ້ວຕໍ່ຈາກນີ້ໄປແມ່ນຍຸກແຫ່ງພຣະບັນຍັດ ໄດ້ສິ້ນສຸດລົງ ແລະ ຍຸກແຫ່ງພຣະຄຸນໄດ້ເລີ່ມຕົ້ນຂຶ້ນ.

ພາລະກິດທີ່ພຣະເຢຊູໄດ້ກະທຳແມ່ນສອດຄ່ອງກັບຄວາມຕ້ອງການຂອງມວນມະນຸດຊາດໃນ ສະໄໝນັ້ນ. ໜ້າທີ່ຂອງພຣະອົງແມ່ນເພື່ອໄຖ່ບາບມະນຸດ, ໃຫ້ອະໄພບາບພວກເຂົາ ແລະ ດັ່ງນັ້ນ ບຸກຄະລິກຂອງພຣະອົງທັງໝົດກໍຄືຄວາມຖ່ອມຕົນ, ຄວາມອົດທົນ, ຄວາມຮັກ, ຄວາມສັດຊື່, ຄວາມ ອົດທົນ, ຄວາມເມດຕາ ແລະ ຄວາມຮັກກະລຸນາ. ພຣະອົງໄດ້ປະທານພອນໃຫ້ແກ່ມະນຸດຢ່າງ ຫຼວງຫຼາຍ ແລະ ນຳຄວາມກະລຸນາມາສູ່ພວກເຂົາຢ່າງມາກມາຍກ່າຍກອງ ແລະ ທຸກສິ່ງທຸກຢ່າງທີ່ຈະ ເຮັດໃຫ້ພວກເຂົາມີຄວາມສຸກໄດ້ ພຣະອົງແມ່ນໄດ້ມອບໃຫ້ພວກເຂົາເພື່ອຄວາມສຸກຂອງພວກເຂົາ, ນັ້ນກໍຄື ຄວາມສັນຕິສຸກ, ຄວາມສຸກ, ຄວາມອົດທົນ, ຄວາມຮັກ, ຄວາມເມດຕາ ແລະ ຄວາມຮັກ ກະລຸນາຂອງພຣະອົງ. ໃນເວລານັ້ນ, ທຸກຢ່າງທີ່ມະນຸດປະສົບພົບພໍ້ ລ້ວນແຕ່ແມ່ນຄວາມອຸດົມສົມບູນ ທີ່ສາມາດເຮັດໃຫ້ມີຄວາມສຸກໄດ້: ຫົວໃຈຂອງພວກເຂົາຢູ່ໃນຄວາມສະຫງົບ ແລະ ໄວ້ວາງໃຈ, ຈິດໃຈຂອງພວກເຂົາໄດ້ຮັບການປອບໂຍນ ແລະ ພວກເຂົາໄດ້ຮັບການອຸ້ມຊູຈາກພຣະຜູ້ຊ່ອຍໃຫ້ ລອດ ນັ້ນກໍຄືພຣະເຢຊູ. ພວກເຂົາສາມາດໄດ້ຮັບສິ່ງເຫລົ່ານີ້ເປັນຜົນມາຈາກພາລະກິດຂອງຍຸກທີ່ ພວກເຂົາມີຊີວິດຢູ່. ໃນຍຸກແຫ່ງພຣະຄຸນ, ມວນມະນຸດໄດ້ຮັບຄວາມເສື່ອມໂຊມຈາກຊາຕານມາແລ້ວ ແລະ ດັ່ງນັ້ນ, ພາລະກິດຂອງການໄຖ່ບາບມວນມະນຸດຊາດຈຶ່ງຕ້ອງການຄວາມກະລຸນາຢ່າງໃຫຍ່ຫຼວງ, ຄວາມອົດກັ້ນ ແລະ ອົດທົນຢ່າງໜັກ ແລະ ນອກຈາກນັ້ນ ເພື່ອປະສົບຄວາມສຳເລັດຂອງຍຸກ ຈຶ່ງ ມີການຖວາຍຢ່າງພຽງພໍເພື່ອຊົດໃຊ້ບາບຂອງມະນຸດ. ສິ່ງທີ່ມວນມະນຸດໄດ້ເຫັນໃນຍຸກແຫ່ງພຣະຄຸນ ແມ່ນການຊົດເຊີຍບາບຂອງມວນມະນຸດຂອງເຮົາ, ນັ້ນຄື ພຣະເຢຊູ. ທັງຫມົດທີ່ພວກເຂົາຮູ້ກ່ຽວກັບ ພຣະເຈົ້າ ຄືຄວາມເມດຕາ ແລະ ອົດທົດ; ແລະ ທັງຫມົດທີ່ພວກເຂົາເຫັນຄືຄວາມເມດຕາ ແລະ ຄວາມ ຮັກກະລຸນາຂອງພຣະເຢຊູ. ທັງໝົດນີ້ເປັນເພາະວ່າພວກເຂົາເກີດຢູ່ໃນຍຸກແຫ່ງພຣະຄຸນ. ດັ່ງນັ້ນ ກ່ອນ ທີ່ພວກເຂົາຈະໄດ້ຮັບການໄຖ່ບາບ ພວກເຂົາຕ້ອງຜະເຊີນກັບຄວາມກະລຸນາຫຼາຍຮູບແບບ ທີ່ພຣະເຢຊູ

ໄດ້ມອບໃຫ້ແກ່ພວກເຂົາ ເຊິ່ງມັນມີປະໂຫຍດຕໍ່ພວກເຂົາຫຼາຍ. ດ້ວຍວິທີນີ້, ພວກເຂົາສາມາດໄດ້ຮັບການອະໄພບາບທີ່ພວກເຂົາກະທຳໂດຍຜ່ານການເສບສຸກໃນຍຸກພຣະຄຸນ ແລະ ຍັງສາມາດໄດ້ຮັບການໄຖ່ບາບໂດຍຜ່ານຄວາມອົດທົນ ອົດກັ້ນຂອງພຣະເຢຊູອີກ. ມີພຽງການອົດທົນອົດກັ້ນຂອງພຣະເຢຊູເທົ່ານັ້ນ ພວກເຂົາຈຶ່ງມີສິດທີ່ຈະໄດ້ຮັບການໃຫ້ອະໄພ ແລະ ເສບສຸກຄວາມອຸດົມສົມບູນຂອງຄວາມກະລຸນາທີ່ໄດ້ຮັບຈາກພຣະເຢຊູ, ດັ່ງທີ່ພຣະອົງໄດ້ກ່າວວ່າ: ເຮົາບໍ່ໄດ້ມາໄຖ່ບາບໃຫ້ຄົນຊອບທຳ ແຕ່ມາເພື່ອໄຖ່ບາບໃຫ້ຄົນຜິດບາບ, ເພື່ອເຮັດໃຫ້ຄົນບາບໄດ້ຮັບການອະໄພບາບ. ຖ້າຫາກວ່າພຣະເຢຊູບັງເກີດເປັນມະນຸດກັບການພິພາກສາລົງໂທດ, ການສາບແຊ່ງ ແລະ ຄວາມບໍ່ອົດທົນຕໍ່ຄວາມຜິດຂອງມວນມະນຸດຊາດ, ມະນຸດຈະບໍ່ມີໂອກາດທີ່ຈະໄຖ່ບາບ ແລະ ຄົງຈະເປັນບາບຕະຫຼອດໄປ. ຖ້າເປັນດັ່ງນັ້ນ, ແຜນການຄຸ້ມຄອງຫົກພັນປີຄົງຈະສິ້ນສຸດໃນຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະບັນຍັດ ກໍ່ຈະແກ່ຍາວຕະຫຼອດຫົກພັນປີ. ບາບຂອງມະນຸດຈະເພີ່ມຫຼາຍຂຶ້ນ ແລະ ໂສກເສົ້າຫຼາຍຂຶ້ນ ແລະ ການສ້າງມະນຸດຈະບໍ່ມີຜົນປະໂຫຍດຫຍັງເລີຍ. ມະນຸດກໍ່ຈະສາມາດພຽງແຕ່ຮັບໃຊ້ພຣະເຢໂຮວາພາຍໃຕ້ພຣະບັນຍັດເທົ່ານັ້ນ, ແຕ່ບາບຂອງພວກເຂົາຈະຫຼາຍເກີນກວ່າ ບາບຂອງມະນຸດທີ່ຖືກສ້າງຂຶ້ນມາໃນຄັ້ງທຳອິດ. ຍິ່ງພຣະເຢຊູຮັກມະນຸດຊາດເທົ່າໃດ, ໃຫ້ອະໄພບາບເຂົາເຈົ້າຫຼາຍເທົ່າໃດ ແລະ ມອບຄວາມເມດຕາ ແລະ ຄວາມຮັກກະລຸນາໃຫ້ພວກເຂົາຢ່າງພຽງພໍເທົ່າໃດ, ມວນມະນຸດກໍ່ຍິ່ງຈະໄດ້ຮັບການຊ່ວຍໃຫ້ລອດພົ້ນຫຼາຍເທົ່ານັ້ນ ແລະ ຖືກເອີ້ນວ່າລູກແກະທີ່ສູນຫາຍ ທີ່ພຣະເຢຊູໄດ້ຊື້ຄືນໃນລາຄາທີ່ແພງທີ່ສຸດ. ຊາຕານບໍ່ສາມາດເຂົ້າຮ່ວມໃນພາລະກິດນີ້ໄດ້ ເພາະວ່າພຣະເຢຊູປະຕິບັດຕໍ່ຜູ້ຕິດຕາມພຣະອົງຄືຜູ້ເປັນແມ່ທີ່ຮັກລູກປະຕິບັດຕໍ່ລູກໃນອ້ອມກອດອັນອົບອຸ່ນຂອງນາງ. ພຣະອົງບໍ່ໄດ້ໂກດເຄືອງພວກເຂົາ ຫລື ດູຫມິ່ນພວກເຂົາ ແຕ່ເຕັມໄປດ້ວຍຄວາມປອບໂຍນ; ພຣະອົງບໍ່ເຄີຍໂກດແຄ້ນໃນທ່າມກາງພວກເຂົາ ແຕ່ໄດ້ອົດທົນກັບບາບຂອງພວກເຂົາ ແລະ ເບິ່ງຂ້າມຄວາມໂງ່ຂອງພວກເຂົາ ແລະ ຄວາມໄຮ້ດຽງສາຂອງພວກເຂົາໄປເຖິງຂັ້ນກ່າວວ່າ: "ໃຫ້ອະໄພຜູ້ອື່ນເຈັດສິບເທື່ອຄູນເຈັດເທື່ອ". ດັ່ງນັ້ນຫົວໃຈຂອງພຣະອົງຫັນປ່ຽນຫົວໃຈຂອງຄົນອື່ນ. ແລ້ວມັນແມ່ນວິທີນີ້ເອງທີ່ຜູ້ຄົນໄດ້ຮັບການໃຫ້ອະໄພບາບໂດຍຜ່ານການອົດທົນຂອງພຣະອົງ.

ເຖິງແມ່ນວ່າພຣະເຢຊູທີ່ຢູ່ໃນການບັງເກີດເປັນມະນຸດຂອງພຣະອົງຈະປາສະຈາກຄວາມຮູ້ສຶກໃດໆ, ພຣະອົງຍັງປອບໃຈພວກສາວົກຂອງພຣະອົງ, ສະໜອງໃຫ້ພວກເຂົາ, ຊ່ວຍເຫຼືອພວກເຂົາ ແລະ ສະໜັບສະໜູນພວກເຂົາຢູ່ສະເໝີ. ເຖິງວ່າພຣະອົງໄດ້ເຮັດເພື່ອສາວົກຂອງພຣະອົງຫຼາຍເທົ່າໃດ ຫຼື ໄດ້ທົນທຸກທໍລະມານຫຼາຍເທົ່າໃດ, ພຣະອົງບໍ່ເຄີຍຮຽກຮ້ອງຈາກຄົນຂອງພຣະອົງເກີນສິ່ງທີ່ຈຳເປັນເລີຍ, ແຕ່ຊໍ້າພັດອົດທົນ ແລະ ຮັບບາບແທນພວກເຂົາ ຈົນເຮັດໃຫ້ຄົນທີ່ຢູ່ໃນ ຍຸກແຫ່ງຄວາມກະລຸນາ ເອີ້ນພຣະອົງວ່າ "ພຣະຜູ້ຊ່ວຍໃຫ້ລອດທີ່ໜ້າຮັກ ພຣະເຢຊູເຈົ້າ". ສຳລັບຜູ້ຄົນໃນເວລານັ້ນ ແລະ ສຳລັບທຸກຄົນ, ສິ່ງທີ່ພຣະເຢຊູມີ ແລະ ເປັນ ແມ່ນຄວາມເມດຕາ ແລະ ຄວາມຮັກກະລຸນາ. ພຣະອົງບໍ່ເຄີຍຈົດຈຳການລ່ວງລະເມີດຂອງຜູ້ຄົນ ແລະ ການປະຕິບັດຂອງພຣະອົງຕໍ່ພວກເຂົາເຈົ້າບໍ່ໄດ້ຂຶ້ນຢູ່ກັບການລ່ວງລະເມີດຂອງພວກເຂົາ. ເນື່ອງຈາກວ່າການປະຕິບັດແບບນັ້ນແມ່ນຢູ່ຍຸກອື່ນ, ພຣະອົງມັກຈະມອບ

ອາຫານ ແລະ ເຄື່ອງດື່ມທີ່ອຸດົມສົມບູນແກ່ຜູ້ຄົນເພື່ອໃຫ້ພວກເຂົາໄດ້ຮັບປະທານຢ່າງອີ່ມໜຳສຳລານສະເໝີ. ພຣະອົງໄດ້ປະຕິບັດຕໍ່ຜູ້ຕິດຕາມພຣະອົງທັງຫມົດດ້ວຍຄວາມກະລຸນາ, ປິ່ນປົວຄົນເຈັບປ່ວຍ, ຂັບໄລ່ພວກຜີປີສາດ, ຟື້ນຜູ້ຕາຍໃຫ້ຄືນມາ. ເພື່ອວ່າຜູ້ຄົນຈະໄດ້ເຊື່ອໃນພຣະອົງ ແລະ ເຫັນວ່າທຸກສິ່ງທີ່ພຣະອົງໄດ້ກະທຳລົງໄປນັ້ນແມ່ນມີຄວາມບໍລິສຸດ ແລະ ຈິງໃຈ, ພຣະອົງໄດ້ສະແດງເຖິງຂະໜາດວ່າຟື້ນຄືນຊີວິດຂອງສົບທີ່ເໜົ່າເປື່ອຍ, ສະແດງໃຫ້ພວກເຂົາເຫັນວ່າ ຍ້ອນກຳມືຂອງພຣະອົງ ແມ່ນແຕ່ຄົນຕາຍແລ້ວຍັງກັບຄືນມາມີຊີວິດອີກ. ຍ້ອນວິທີການແບບນີ້ພຣະອົງໄດ້ຮັບເອົາຄວາມເຈັບປວດຢ່າງງຽບໆ ແລະ ໄດ້ເຮັດພາລະກິດແຫ່ງການໄຖ່ບາບຂອງພຣະອົງທ່າມກາງພວກເຂົາ. ກ່ອນທີ່ພຣະອົງຈະຖືກຕອກຕະປູໃສ່ໄມ້ກາງແຂນ, ພຣະເຢຊູໄດ້ຮັບເອົາບາບຂອງມວນມະນຸດຊາດມາແລ້ວ ແລະ ກາຍເປັນເຄື່ອງບູຊາໄຖ່ບາບຂອງມວນມະນຸດຊາດ. ກ່ອນທີ່ຈະຖືກຄຶງໃສ່ໄມ້ກາງແຂນ, ພຣະອົງໄດ້ເປີດທາງໄປສູ່ໄມ້ກາງແຂນເພື່ອໄຖ່ເອົາມວນມະນຸດຊາດ. ໃນທີ່ສຸດພຣະອົງໄດ້ຖືກຕອກຕະປູຕິດໃສ່ໄມ້ກາງແຂນ, ເສຍສະຫຼະຕົນເອງເພື່ອກາງແຂນ ແລະ ພຣະອົງໄດ້ມອບ ຄວາມເມດຕາ, ຄວາມຮັກກະລຸນາ ແລະ ຄວາມບໍລິສຸດທັງຫມົດໃຫ້ແກ່ມວນມະນຸດຊາດ. ເພື່ອມະນຸດຊາດ, ພຣະອົງອົດທົນສະເຫມີ, ບໍ່ເຄີຍແກ້ແຄ້ນ, ແຕ່ໃຫ້ອະໄພບາບຂອງພວກເຂົາເຈົ້າ, ເຕືອນພວກເຂົາໃຫ້ກັບໃຈ ແລະ ສອນພວກເຂົາໃຫ້ມີຄວາມອົດທົນ, ອົດກັ້ນ ແລະ ໃຫ້ຄວາມຮັກ, ໃຫ້ນຳຮອຍພຣະອົງ ແລະ ເສຍສະຫຼະຕົນເອງເພື່ອຄວາມໝາຍຂອງໄມ້ກາງແຂນ. ຄວາມຮັກຂອງພຣະອົງຕໍ່ອ້າຍເອື້ອຍນ້ອງແມ່ນເກີນຄວາມຮັກທີ່ມີໃຫ້ນາງມາຣີ. ພາລະກິດທີ່ພຣະອົງໄດ້ກະທຳເປັນຫລັກການປິ່ນປົວຜູ້ຄົນ ແລະ ຂັບໄລ່ພວກຜີມານຮ້າຍ, ທັງຫມົດແມ່ນເພື່ອເປັນການໄຖ່ບາບໃຫ້ມວນມະນຸດຊາດ. ບໍ່ວ່າພຣະອົງຈະໄປໃສ, ພຣະອົງໄດ້ປະຕິບັດຕໍ່ທຸກຄົນທີ່ຕິດຕາມພຣະອົງດ້ວຍຄວາມກະລຸນາ. ພຣະອົງໄດ້ເຮັດໃຫ້ຜູ້ທຸກຍາກກາຍເປັນເສດຖີ, ຜູ້ເປ້ຍລ່ອຍຍ່າງໄດ້, ຄົນຕາບອດກັບມາເຫັນ ແລະ ຄົນຫູຫນວກໄດ້ຍິນ; ພຣະອົງຍັງໄດ້ເຊື້ອເຊີນບັນດາຄົນຕໍ່າຕ້ອຍ ຜູ້ຍາກໄຮ້, ຄົນບາບ, ນັ່ງຢູ່ໂຕະດຽວກັນກັບພຣະອົງ, ບໍ່ເຄີຍຫຼີກເວັ້ນພວກເຂົາ ແຕ່ມີຄວາມອົດທົນຢູ່ສະເໝີ, ເຖິງຂັ້ນກ່າວວ່າ: "ເມື່ອຜູ້ລ້ຽງແກະສູນເສຍແກະໜຶ່ງໂຕຈາກຈຳນວນຫນຶ່ງຮ້ອຍໂຕ, ລາວຈະຊອກຫາແກະທີ່ສູນເສຍນັ້ນແມ່ນແຕ່ຕ້ອງປ່ອຍປະແກະ 99 ໂຕທີ່ເຫຼືອໄວ້ຂ້າງຫຼັງກໍ່ຕາມ, ເມື່ອລາວຫາພົບມັນແລ້ວ ລາວຈະປິຕິຍິນດີຢ່າງໃຫຍ່ຫຼວງ". ພຣະອົງຮັກຜູ້ຕິດຕາມພຣະອົງປານກັບແມ່ແກະຮັກລູກຂອງຕົນ. ເຖິງແມ່ນວ່າພວກເຂົາໂງ່ຈ້າ ແລະ ບໍ່ຮັບຮູ້ ແລະ ເປັນຄົນບາບຢູ່ໃນສາຍຕາຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນຍັງເປັນຄົນອ່ອນໂຍນທີ່ສຸດຂອງສັງຄົມ, ພຣະອົງໄດ້ຖືວ່າຄົນບາບເຫຼົ່ານີ້ ຄົນທີ່ຄົນອື່ນດູຫມິ່ນ ເປັນທີ່ໂປດປານໃນສາຍຕາຂອງພຣະອົງ. ຍ້ອນພຣະອົງໄດ້ໂປດປານພວກເຂົາ, ພຣະອົງໄດ້ມອບຊີວິດຂອງພຣະອົງເພື່ອພວກເຂົາ ດັ່ງທີ່ລູກແກະໄດ້ຖືກຖວາຍເທິງແທ່ນບູຊາ. ພຣະອົງໄດ້ໄປຢູ່ໃນທ່າມກາງພວກເຂົາເຫມືອນກັບວ່າພຣະອົງເປັນຜູ້ຮັບໃຊ້ຂອງພວກເຂົາ, ປ່ອຍໃຫ້ພວກເຂົາໃຊ້ພຣະອົງ ແລະ ຂ້າພຣະອົງ, ຍອມຮັບໃຊ້ພວກເຂົາໂດຍບໍ່ມີເງື່ອນໄຂ. ຕໍ່ກັບຜູ້ຕິດຕາມພຣະອົງ ພຣະອົງເປັນພຣະເຢຊູພຣະຜູ້ຊ່ວຍໃຫ້ລອດ, ແຕ່ຕໍ່ກັບພວກຟາຣີຊາຍ ຜູ້ສິດສອນຜູ້ຄົນຈາກແທ່ນທີ່ສູງ, ພຣະອົງບໍ່ສະແດງຄວາມເມດຕາ ແລະ ຄວາມຮັກກະລຸນາ, ແຕ່ຄວາມ

ກຽດຊັງ ແລະ ຄວາມບໍ່ພໍໃຈ. ພຣະອົງບໍ່ໄດ້ກະທຳການໃດຢ່າງຫຼວງຫຼາຍກັບພວກຟາຣີຊາຍ, ມີແຕ່ສັ່ງສອນພວກເຂົາ ແລະ ຕຳນິພວກເຂົາບາງຄັ້ງຄາວ; ພຣະອົງບໍ່ໄດ້ໄປຢູ່ໃນທ່າມກາງພວກເຂົາ ດຳເນີນພາລະກິດໄຖ່ບາບ ຫຼື ປະຕິບັດການສຳຄັນ ແລະ ສິ່ງມະຫັດສະຈັນ. ພຣະອົງໄດ້ມອບຄວາມເມດຕາ ແລະ ຄວາມຮັກກະລຸນາຂອງພຣະອົງໃຫ້ຜູ້ຕິດຕາມພຣະອົງ, ຮັບເອົາຄວາມທຸກເພື່ອຄົນບາບເຫຼົ່ານີ້ຈົນເຖິງທີ່ສຸດ, ເມື່ອພຣະອົງຖືກຕອກຕະປູໃສ່ໄມ້ກາງແຂນ ແລະ ທົນທຸກທໍລະມານຈົນກວ່າພຣະອົງໄດ້ໄຖ່ບາບໃຫ້ມະນຸດທັງປວງ, ນີ້ແມ່ນຜົນລວມຂອງພາລະກິດຂອງພຣະອົງ.

ຖ້າປາສະຈາກການໄຖ່ບາບຂອງພຣະເຢຊູ, ມະນຸດຄົງຈະມີຊີວິດຢູ່ກັບຄວາມບາບຕະຫຼອດໄປ ແລະ ກາຍເປັນລູກຫຼານຂອງຄວາມບາບ, ລູກຫຼານຂອງພວກມານຮ້າຍ. ຖ້າເປັນໄປຕາມນີ້ ໃນໂລກນີ້ກໍ່ຈະກາຍເປັນສະຖານທີ່ພັກເຊົາຂອງຊາຕານ, ບ່ອນທີ່ຢູ່ອາໄສຂອງພວກມັນ. ແຕ່ພາລະກິດແຫ່ງການໄຖ່ບາບຕ້ອງການ ການສະແດງອອກເຊິ່ງຄວາມເມດຕາ ແລະ ຄວາມຮັກກະລຸນາຕໍ່ມວນມະນຸດ; ດ້ວຍວິທີນີ້ເທົ່ານັ້ນ ມະນຸດຈຶ່ງຈະໄດ້ຮັບການໃຫ້ອະໄພບາບ ແລະ ສຸດທ້າຍໄດ້ຮັບສິດທີ່ຈະເຮັດໃຫ້ສົມບູນ ແລະ ໄດ້ຮັບພອນຢ່າງເຕັມທີ່. ຖ້າປາສະຈາກພາລະກິດໃນຍຸກນີ້, ແຜນການຄຸ້ມຄອງຫົກພັນປີຈະບໍ່ສາມາດດຳເນີນຕໍ່ໄປໄດ້. ຖ້າຫາກວ່າພຣະເຢຊູບໍ່ໄດ້ຖືກຄຶງໃສ່ໄມ້ກາງແຂນ, ຖ້າຫາກພຣະອົງພຽງແຕ່ໄດ້ປິ່ນປົວຜູ້ຄົນ ແລະ ຂັບໄລ່ພວກມານຮ້າຍ, ຜູ້ຄົນກໍຈະບໍ່ສາມາດໄດ້ຮັບການໃຫ້ອະໄພບາບຂອງພວກເຂົາຢ່າງສົມບູນ. ໃນໄລຍະສາມປີເຄິ່ງທີ່ພຣະເຢຊູໃຊ້ເວລາກະທຳພາລະກິດຂອງພຣະອົງເທິງແຜ່ນດິນໂລກ, ພຣະອົງໄດ້ສຳເລັດພຽງແຕ່ເຄິ່ງໜຶ່ງຂອງພາລະກິດແຫ່ງການໄຖ່ບາບຂອງພຣະອົງເທົ່ານັ້ນ; ຈົນກວ່າວ່າພຣະອົງໄດ້ຖືກຄຶງໃສ່ເທິງໄມ້ກາງແຂນ ແລະ ກາຍເປັນເໝືອນເນື້ອໜັງທີ່ເປັນບາບທີ່ມອບຄືນໃຫ້ແກ່ຄົນຊົ່ວ, ພຣະອົງຈຶ່ງໄດ້ສຳເລັດພາລະກິດຂອງການຖືກຄຶງໃສ່ໄມ້ກາງແຂນ ແລະ ເຂົ້າໃຈແຈ່ມແຈ້ງເຖິງຊະຕາກຳຂອງມະນຸດ. ຫລັງຈາກທີ່ຮ່າງກາຍຂອງພຣະອົງຖືກມອບໃຫ້ຊາຕານ, ພຣະອົງກໍໄດ້ໄຖ່ບາບໃຫ້ກັບມະນຸດຊາດທັງປວງ. ເປັນເວລາສາມສິບສາມປີເຄິ່ງ, ພຣະອົງໄດ້ທົນທຸກທໍລະມານຢູ່ເທິງແຜ່ນດິນໂລກນີ້, ຖືກເຍາະເຍີ້ຍໃສ່ຮ້າຍ, ຖືກດູຖູກ ແລະ ຖືກປະຖິ້ມ, ຈົນເຖິງຂັ້ນທີ່ພຣະອົງບໍ່ມີບ່ອນຊຸກຫົວນອນ, ບໍ່ມີບ່ອນໃຫ້ພັກເຊົາ ແລະ ຫຼັງຈາກນັ້ນ ພຣະອົງກໍຖືກຄຶງໃສ່ໄມ້ກາງແຂນ, ທັງຫມົດຕົວຕົນຂອງພຣະອົງ ເຊິ່ງເປັນຮ່າງກາຍທີ່ບໍລິສຸດ ແລະ ໄຮ້ດຽງສາຖືກຕອກຕະປູຄຶງໄວ້ເທິງໄມ້ກາງແຂນ. ພຣະອົງອົດທົນຕໍ່ຄວາມທຸກທໍລະມານທຸກດ້ານ. ຜູ້ທີ່ມີອຳນາດໄດ້ເຍາະເຍີ້ຍ ແລະ ຂ້ຽນຕີພຣະອົງ ແລະ ພວກທະຫານເຮັດເຖິງກັບຖົ່ມນ້ຳລາຍໃສ່ໃບໜ້າຂອງພຣະອົງ; ແຕ່ພຣະອົງຍັງຄົງງຽບສະຫງົບ ແລະ ທົນທຸກທໍລະມານຈົນເຖິງທີ່ສຸດ, ຖວາຍຕົນຢ່າງບໍ່ມີເງື່ອນໄຂຈົນເຖິງຈຸດຈົບຂອງຊີວິດ, ດັ່ງນັ້ນແລ້ວ ພຣະອົງຈຶ່ງໄດ້ໄຖ່ບາບມະນຸດຊາດທັງຫມົດ. ເມື່ອນັ້ນພຣະອົງກໍໄດ້ຖືກໂຜດໃຫ້ພັກຜ່ອນ. ພາລະກິດທີ່ພຣະເຢຊູໄດ້ກະທຳເປັນພຽງແຕ່ຍຸກແຫ່ງພຣະຄຸນ; ມັນບໍ່ໄດ້ລວມເຖິງຍຸກແຫ່ງພຣະບັນຍັດ ແລະ ມັນບໍ່ແມ່ນການທົດແທນພາລະກິດໃນຍຸກສຸດທ້າຍແຕ່ຢ່າງໃດ. ນີ້ແມ່ນຄວາມສຳຄັນຂອງພາລະກິດຂອງພຣະເຢຊູໃນຍຸກແຫ່ງພຣະຄຸນ, ຍຸກທີສອງທີ່ມະນຸດໄດ້ຜ່ານພົ້ນ ນັ້ນກໍຄືຍຸກແຫ່ງການໄຖ່ບາບ.

# ພຣະທຳສຳລັບຄົນໜຸ່ມ ແລະ ຄົນເຖົ້າ

ເຮົາໄດ້ປະຕິບັດພາລະກິດຈຳນວນຫຼວງຫຼາຍເທິງແຜ່ນດິນໂລກ ແລະ ເຮົາໄດ້ຍ່າງທ່າມກາງມະນຸດຊາດເປັນເວລາຫຼາຍປີ, ແຕ່ຫາຍາກທີ່ຜູ້ຄົນຈະມີຄວາມຮູ້ກ່ຽວກັບພາບລັກຂອງເຮົາ ແລະ ອຸປະນິໄສຂອງເຮົາ ແລະ ມີໜ້ອຍຄົນທີ່ສາມາດອະທິບາຍພາລະກິດທີ່ເຮົາເຮັດຢ່າງທົ່ວເຖິງ. ມີຫຼາຍສິ່ງທີ່ຜູ້ຄົນຂາດ, ພວກເຂົາຂາດຄວາມເຂົ້າໃຈໃນສິ່ງທີ່ເຮົາເຮັດຢູ່ສະເໝີ ແລະ ຫົວໃຈຂອງພວກເຂົາກໍເຝົ້າປ້ອງກັນຢູ່ສະເໝີ ຄືກັບວ່າພວກເຂົາຢ້ານຢູ່ເລີກໆວ່າ ເຮົາຈະວາງພວກເຂົາຢູ່ໃນອີກສະຖານະການ ແລະ ຫຼັງຈາກນັ້ນກໍບໍ່ໃສ່ໃຈກັບພວກເຂົາອີກ. ສະນັ້ນ ທ່າທີຂອງຜູ້ຄົນຕໍ່ເຮົາຈຶ່ງບໍ່ຮ້ອນບໍ່ໜາວ ພ້ອມທັງມີຄວາມລະມັດລະວັງຢ່າງສູງ. ນີ້ແມ່ນຍ້ອນຜູ້ຄົນໄດ້ມາເຖິງປັດຈຸບັນໂດຍບໍ່ເຂົ້າໃຈພາລະກິດທີ່ເຮົາປະຕິບັດ ແລະ ໂດຍສະເພາະແລ້ວ ພວກເຂົາແມ່ນສັບສົນກັບພຣະທຳທີ່ເຮົາກ່າວຕໍ່ພວກເຂົາ. ພວກເຂົາຖືພຣະທຳຂອງເຮົາໄວ້ໃນມືຂອງພວກເຂົາ ໂດຍບໍ່ຮູ້ວ່າພວກເຂົາຄວນອຸທິດຕົນເອງໃຫ້ແກ່ຄວາມເຊື່ອທີ່ບໍ່ໝັ້ນຄົງໃນພຣະທຳເຫຼົ່ານັ້ນ ຫຼື ພວກເຂົາຄວນເລືອກທີ່ຈະບໍ່ຕັດສິນໃຈ ແລະ ລືມພວກມັນໄປ. ພວກເຂົາບໍ່ຮູ້ວ່າພວກເຂົາຄວນນຳພຣະທຳເຫຼົ່ານີ້ເຂົ້າສູ່ການປະຕິບັດ ຫຼື ລໍຖ້າ ແລະ ເບິ່ງ ຫຼື ພວກເຂົາຄວນປະຖິ້ມທຸກສິ່ງ ແລະ ຕິດຕາມຢ່າງກ້າຫານ ຫຼື ສືບຕໍ່ຍຶດໝັ້ນຕໍ່ມິດຕະພາບທາງໂລກຄືກັບແຕ່ກ່ອນ. ໂລກພາຍໃນຂອງຜູ້ຄົນສັບສົນຫຼາຍ ແລະ ພວກມັນມີເລ່ລ່ຽມຫຼາຍ. ຍ້ອນຜູ້ຄົນບໍ່ສາມາດເຫັນພຣະທຳຂອງເຮົາໄດ້ຢ່າງຊັດເຈນ ຫຼື ຢ່າງຄົບຖ້ວນ, ພວກເຂົາຫຼາຍຄົນຈຶ່ງມີຄວາມຫຍຸ້ງຍາກໃນການປະຕິບັດພຣະທຳເຫຼົ່ານັ້ນ ແລະ ມີຄວາມຫຍຸ້ງຍາກທີ່ຈະວາງຫົວໃຈຂອງພວກເຂົາຕໍ່ໜ້າເຮົາ. ເຮົາເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມຫຍຸ້ງຍາກຂອງພວກເຈົ້າ. ຄວາມບົກຜ່ອງຫຼາຍຢ່າງແມ່ນບໍ່ສາມາດຫຼີກເວັ້ນໄດ້ ເມື່ອດຳລົງຊີວິດຢູ່ໃນເນື້ອໜັງ ແລະ ປັດໄຈທີ່ເປັນຈິງຫຼາຍຢ່າງໄດ້ສ້າງຄວາມຫຍຸ້ງຍາກສຳລັບພວກເຈົ້າ. ພວກເຈົ້າລ້ຽງຄອບຄົວຂອງພວກເຈົ້າ, ໃຊ້ເວລາຫຼາຍມື້ເພື່ອເຮັດວຽກໜັກ ແລະ ເດືອນ ແລະ ປີກໍຜ່ານໄປດ້ວຍຄວາມລຳບາກ. ມີຄວາມຫຍຸ້ງຍາກຫຼາຍຢ່າງໃນການດຳລົງຊີວິດໃນເນື້ອໜັງ, ເຮົາບໍ່ໄດ້ປະຕິເສດສິ່ງນີ້ ແລະ ແນ່ນອນ ສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າແມ່ນເກີດຂຶ້ນຕາມຄວາມຫຍຸ້ງຍາກຂອງພວກເຈົ້າ. ເງື່ອນໄຂໃນພາລະກິດທີ່ເຮົາປະຕິບັດແມ່ນລ້ວນແລ້ວແຕ່ອີງໃສ່ວຸດທິພາວະຕົວຈິງຂອງພວກເຈົ້າ. ບາງເທື່ອໃນອະດີດ ເງື່ອນໄຂທີ່ຜູ້ຄົນຮຽກຮ້ອງຈາກພວກເຈົ້າໃນພາລະກິດຂອງພວກເຂົາແມ່ນປະສົມກັບອົງປະກອບທີ່ເກີນຄວາມຈຳເປັນ, ແຕ່ພວກເຈົ້າຄວນຮູ້ວ່າ ເຮົາບໍ່ເຄີຍຮຽກຮ້ອງພວກເຈົ້າໃນສິ່ງທີ່ເຮົາເວົ້າ ແລະ ເຮັດຢ່າງເກີນຄວາມຈຳເປັນ. ເງື່ອນໄຂທັງໝົດແມ່ນອີງຕາມທຳມະຊາດຂອງຜູ້ຄົນ, ເນື້ອໜັງ ແລະ ສິ່ງທີ່ພວກເຂົາຕ້ອງການ. ພວກເຈົ້າຄວນຮູ້ຈັກ ແລະ ເຮົາສາມາດບອກພວກເຈົ້າໄດ້ຢ່າງຊັດເຈນຫຼາຍວ່າ ເຮົາບໍ່ຕໍ່ຕ້ານວິທີການຄິດທີ່ມີເຫດຜົນໃດໜຶ່ງທີ່ຜູ້ຄົນມີ ແລະ ເຮົາບໍ່ຕໍ່ຕ້ານທຳມະຊາດໂດຍກຳເນີດຂອງມະນຸດຊາດ. ມັນເປັນພຽງແຕ່ຍ້ອນຜູ້ຄົນບໍ່ເຂົ້າໃຈວ່າມາດຕະຖານທີ່ເຮົາໄດ້ກຳນົດໃຫ້ແກ່ພວກເຂົາແມ່ນຫຍັງແທ້ ຫຼື ພວກເຂົາບໍ່ເຂົ້າໃຈຄວາມໝາຍເດີມຂອງພຣະທຳຂອງເຮົາ, ເຊິ່ງຜູ້ຄົນຈຶ່ງສົງໄສໃນພຣະທຳຂອງເຮົາຈົນເຖິງປັດຈຸບັນ ແລະ ເຖິງກັບມີຜູ້ຄົນ

ໜ້ອຍກວ່າເຄິ່ງໜຶ່ງທີ່ເຊື່ອໃນພຣະທຳຂອງເຮົາ. ຄົນທີ່ເຫຼືອແມ່ນຜູ້ບໍ່ເຊື່ອ ແລະ ຍິ່ງໄປກວ່ານັ້ນ ຍັງມີຄົນທີ່ມັກຟັງເຮົາ "ເລົ່າເລື່ອງ". ຍິ່ງໄປກວ່ານັ້ນ, ມີຫຼາຍຄົນທີ່ເພີດເພີນກັບການສະແດງ. ເຮົາເຕືອນພວກເຈົ້າວ່າ: ພຣະທຳຂອງເຮົາຫຼາຍຂໍ້ໄດ້ຖືກເປີດເຜີຍໃຫ້ແກ່ຄົນທີ່ເຊື່ອໃນເຮົາແລ້ວ ແລະ ຄົນທີ່ໄດ້ເພີດເພີນກັບພາບທິວທັດທີ່ສວຍງາມຂອງອານາຈັກ ແຕ່ຖືກຂັງໄວ້ຂ້າງນອກປະຕູໂຂງຂອງມັນນັ້ນຖືກເຮົາກຳຈັດອອກແລ້ວ. ພວກເຈົ້າບໍ່ໄດ້ເປັນພຽງເຂົ້ານົກທີ່ຖືກເຮົາລັງກຽດ ແລະ ປະຕິເສດບໍ? ພວກເຈົ້າສາມາດເບິ່ງເຮົາຈາກໄປ ແລະ ຫຼັງຈາກນັ້ນກໍຕ້ອນຮັບການກັບຄືນມາຂອງເຮົາຢ່າງປິຕິຍິນດີໄດ້ແນວໃດ? ເຮົາບອກພວກເຈົ້າວ່າ ຫຼັງຈາກທີ່ປະຊາຊົນເມືອງນີນາເວໄດ້ຍິນພຣະທຳທີ່ໃຈຮ້າຍຂອງພຣະເຢໂຮວາ, ພວກເຂົາກໍກັບໃຈດ້ວຍຖົງກະສອບ ແລະ ຂີ້ເຖົ່າທັນທີ. ມັນເປັນຍ້ອນພວກເຂົາເຊື່ອພຣະທຳຂອງພຣະອົງ, ພວກເຂົາຈຶ່ງເຕັມໄປດ້ວຍຄວາມຢຳເກງ ແລະ ຄວາມຢ້ານກົວ ແລະ ດ້ວຍເຫດນັ້ນ ຈຶ່ງກັບໃຈດ້ວຍຖົງກະສອບ ແລະ ຂີ້ເຖົ່າ. ແຕ່ສຳລັບຜູ້ຄົນໃນປັດຈຸບັນ, ເຖິງແມ່ນພວກເຈົ້າເຊື່ອພຣະທຳຂອງເຮົາເຊັ່ນກັນ ແລະ ຍິ່ງໄປກວ່ານັ້ນ ເຊື່ອວ່າ ພຣະເຢໂຮວາໄດ້ກັບມາຢູ່ທ່າມກາງພວກເຈົ້າອີກຄັ້ງໃນມື້ນີ້, ທ່າທີຂອງພວກເຈົ້າກໍເຕັມໄປດ້ວຍການບໍ່ເຄົາລົບນັບຖື, ຄືກັບວ່າພວກເຈົ້າເຫັນພຣະເຢຊູທີ່ເກີດໃນຢູດາຍເປັນເວລາຫຼາຍພັນປີຜ່ານມາ ແລະ ບັດນີ້ກໍໄດ້ລົງມາຢູ່ທ່າມກາງພວກເຈົ້າ. ເຮົາເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມຫຼອກລວງທີ່ມີຢູ່ພາຍໃນຫົວໃຈຂອງພວກເຈົ້າ; ພວກເຈົ້າຫຼາຍຄົນຕິດຕາມເຮົາ ດ້ວຍຄວາມຢາກຮູ້ຢາກເຫັນ ແລະ ມາເພື່ອສະແຫວງຫາເຮົາ ດ້ວຍຄວາມວ່າງເປົ່າ. ເມື່ອຄວາມປາຖະໜາຢ່າງທີສາມຂອງພວກເຈົ້າ ນັ້ນກໍຄື ຄວາມປາຖະໜາຂອງພວກເຈົ້າເພື່ອຊີວິດທີ່ສັນຕິສຸກ ແລະ ມີຄວາມສຸກແຕກສະຫຼາຍ, ແລ້ວຄວາມຢາກຮູ້ຢາກເຫັນຂອງພວກເຈົ້າກໍຫາຍໄປເຊັ່ນກັນ. ຄວາມຫຼອກລວງທີ່ມີຢູ່ພາຍໃນຫົວໃຈຂອງພວກເຈົ້າແຕ່ລະຄົນແມ່ນຖືກເປີດໂປງຜ່ານຄຳເວົ້າ ແລະ ການກະທຳຂອງພວກເຈົ້າ. ວົງແບບກົງໄປກົງມາກໍຄື ພວກເຈົ້າພຽງແຕ່ຢາກຮູ້ຢາກເຫັນກ່ຽວກັບເຮົາ, ແຕ່ບໍ່ຢຳເກງເຮົາ; ພວກເຈົ້າບໍ່ໃສ່ໃຈລີ້ນຂອງພວກເຈົ້າ ແລ້ວແຮງໄກທີ່ພວກເຈົ້າຈະຢັບຢັ້ງພຶດຕິກຳຂອງພວກເຈົ້າ. ແລ້ວພວກເຈົ້າມີຄວາມເຊື່ອປະເພດໃດກັນແທ້? ມັນເປັນຈິງແທ້ບໍ? ພວກເຈົ້າພຽງແຕ່ໃຊ້ພຣະທຳຂອງເຮົາເພື່ອປັດເປົ່າຄວາມກັງວົນຂອງພວກເຈົ້າ ແລະ ບັນເທົາຄວາມເບື່ອໜ່າຍຂອງພວກເຈົ້າ, ເຕີມເຕັມພື້ນທີ່ວ່າງເປົ່າທີ່ຫຼົງເຫຼືອໃນຊີວິດຂອງເຈົ້າ. ຜູ້ໃດທ່າມກາງພວກເຈົ້າໄດ້ນຳພຣະທຳຂອງເຮົາເຂົ້າສູ່ການປະຕິບັດແດ່? ຜູ້ໃດມີຄວາມເຊື່ອທີ່ແທ້ຈິງແດ່? ພວກເຈົ້າສືບຕໍ່ຮ້ອງວ່າ ພຣະເຈົ້າເປັນພຣະເຈົ້າ ຜູ້ທີ່ເຫັນໃນສ່ວນເລິກຫົວໃຈຂອງຜູ້ຄົນ, ແຕ່ພຣະເຈົ້າທີ່ພວກເຈົ້າຮ້ອງຫາໃນຫົວໃຈຂອງພວກເຈົ້າເຂົ້າກັບເຮົາໄດ້ແນວໃດ? ໃນເມື່ອພວກເຈົ້າຮ້ອງແບບນີ້, ແລ້ວເປັນຫຍັງພວກເຈົ້າຈຶ່ງເຮັດແບບນັ້ນ? ມັນເປັນໄປໄດ້ບໍວ່າ ນີ້ແມ່ນຄວາມຮັກທີ່ພວກເຈົ້າຕ້ອງການຕອບແທນເຮົາ? ມີຄວາມອຸທິດຈຳນວນບໍ່ໜ້ອຍໃນຮີມສົບຂອງພວກເຈົ້າ, ແຕ່ຄວາມເສຍສະຫຼະຂອງພວກເຈົ້າຢູ່ໃສ ແລະ ການກະທຳດີຂອງພວກເຈົ້າເດ? ຖ້າມັນບໍ່ແມ່ນຍ້ອນຄຳເວົ້າຂອງພວກເຈົ້າມາເຖິງຫູຂອງເຮົາ, ເຮົາຈະສາມາດກຽດຊັງພວກເຈົ້າຫຼາຍສໍ່ານັ້ນໄດ້ແນວໃດ? ຖ້າພວກເຈົ້າເຊື່ອໃນເຮົາຢ່າງແທ້ຈິງ, ພວກເຈົ້າຈະຕົກລົງໃນສະພາວະທີ່ລຳບາກແບບນີ້ໄດ້ແນວໃດ? ພວກເຈົ້າມີສີໜ້າອຸກໃຈເທິງໃບໜ້າ

ຂອງພວກເຈົ້າ ຄືກັບວ່າພວກເຈົ້າຢູ່ໃນດິນແດນມໍລະນາ ໂດຍກຳລັງຖືກພິຈາລະນາຄະດີ. ພວກເຈົ້າບໍ່ມີກຳລັງແມ່ນແຕ່ໜ້ອຍດຽວ ແລະ ພວກເຈົ້າເວົ້າກ່ຽວກັບສຽງພາຍໃນຂອງພວກເຈົ້າຢ່າງອ່ອນແຮງ; ພວກເຈົ້າເຖິງກັບເຕັມໄປດ້ວຍການຈົ່ມຕໍ່ວ່າ ແລະ ການສາບແຊ່ງ. ພວກເຈົ້າໄດ້ສູນເສຍຄວາມເຊື່ອໃນສິ່ງທີ່ເຮົາເຮັດແຕ່ດົນມາແລ້ວ ແລະ ແມ່ນແຕ່ຄວາມເຊື່ອເດີມຂອງພວກເຈົ້າກໍຫາຍໄປ, ແລ້ວພວກເຈົ້າຈະສາມາດຕິດຕາມໄປຈົນເຖິງທີ່ສຸດໄດ້ແນວໃດ? ໃນເມື່ອເປັນແບບນີ້, ແລ້ວພວກເຈົ້າຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ແນວໃດ?

ເຖິງແມ່ນວ່າພາລະກິດຂອງເຮົາເປັນປະໂຫຍດຫຼາຍສຳລັບພວກເຈົ້າ, ແຕ່ພຣະທຳຂອງເຮົາກໍສູນເສຍໃນພວກເຈົ້າຢູ່ສະເໝີ ແລະ ບໍ່ໄດ້ເກີດຫຍັງເລີຍໃນພວກເຈົ້າ. ມັນຍາກທີ່ຈະຄົ້ນພົບສິ່ງທີ່ເຮົາຈະເຮັດໃຫ້ສົມບູນ ແລະ ໃນປັດຈຸບັນ ເຮົາເກືອບສູນເສຍຄວາມຫວັງໃນພວກເຈົ້າ. ເຮົາໄດ້ຄົ້ນຫາໃນບັນດາພວກເຈົ້າເປັນເວລາຫຼາຍປີ, ແຕ່ມັນຍາກທີ່ຈະຄົ້ນພົບຜູ້ໃດຜູ້ໜຶ່ງທີ່ສາມາດເປັນຜູ້ທີ່ເຮົາໄວ້ເນື້ອເຊື່ອໃຈໄດ້. ເຮົາຮູ້ສຶກຄືກັບວ່າ ເຮົາບໍ່ມີຄວາມໝັ້ນໃຈທີ່ຈະສືບຕໍ່ປະຕິບັດພາລະກິດໃນພວກເຈົ້າ ແລະ ບໍ່ມີຄວາມຮັກທີ່ຈະສືບຕໍ່ຮັກພວກເຈົ້າ. ນີ້ແມ່ນຍ້ອນເຮົາໄດ້ຖືກ "ຄວາມສຳເລັດ" ຂອງພວກເຈົ້າກຽດຊັງຕັ້ງແຕ່ດົນແລ້ວ, ພວກມັນຊ່າງເລັກນ້ອຍ ແລະ ເປັນຕາເວດທະນາ; ມັນເບິ່ງຄືກັບວ່າ ເຮົາບໍ່ເຄີຍເວົ້າໃນທ່າມກາງພວກເຈົ້າຈັກເທື່ອ ແລະ ບໍ່ເຄີຍປະຕິບັດພາລະກິດໃນພວກເຈົ້າຈັກເທື່ອ. ຄວາມສຳເລັດຂອງພວກເຈົ້າເປັນຕາລັງກຽດຫຼາຍ. ພວກເຈົ້ານຳຫາຍະນະ ແລະ ຄວາມອັບອາຍມາສູ່ຕົນເອງຢູ່ສະເໝີ ແລະ ພວກເຈົ້າເກືອບບໍ່ມີຄຸນຄ່າເລີຍ. ຫາໄດ້ຍາກທີ່ເຮົາຈະຄົ້ນພົບລັກສະນະຂອງມະນຸດໃນພວກເຈົ້າ ຫຼື ໄດ້ກິ່ນຮ່ອງຮອຍຂອງມະນຸດ. ກິ່ນອັນສົດໃສຂອງພວກເຈົ້າມີຢູ່ໃສ? ລາຄາທີ່ພວກເຈົ້າໄດ້ຈ່າຍຫຼາຍປີແມ່ນຢູ່ໃສ ແລະ ຜົນໄດ້ຮັບແມ່ນຢູ່ໃສ? ພວກເຈົ້າບໍ່ເຄີຍຄົ້ນພົບຫຍັງເລີຍບໍ? ບັດນີ້ ພາລະກິດຂອງເຮົາມີການເລີ່ມຕົ້ນໃໝ່ ນັ້ນກໍຄື ການຕັ້ງຕົ້ນໃໝ່. ເຮົາກຳລັງຈະປະຕິບັດແຜນການອັນຍິ່ງໃຫຍ່ ແລະ ເຮົາຕ້ອງການສຳເລັດພາລະກິດທີ່ຍິ່ງໃຫຍ່ຂຶ້ນກວ່າເດີມ, ແຕ່ພວກເຈົ້າຍັງກິ້ງເກືອກໃນຂີ້ຕົມຄືແຕ່ກ່ອນ, ດຳລົງຊີວິດໃນນໍ້າສົກກະປົກແຫ່ງອະດີດ ແລະ ບໍ່ສາມາດເຮັດໃຫ້ຕົນເອງຫຼຸດພົ້ນອອກຈາກສະພາວະຫຍຸ້ງຍາກເດີມຂອງພວກເຈົ້າໄດ້ເລີຍ. ສະນັ້ນ ພວກເຈົ້າຍັງບໍ່ໄດ້ຮັບຫຍັງຈາກພຣະທຳຂອງເຮົາ. ພວກເຈົ້າຍັງບໍ່ໄດ້ເຮັດໃຫ້ຕົນເອງເປັນອິດສະຫຼະຈາກບ່ອນຂີ້ຕົມດັ່ງເດີມຂອງພວກເຈົ້າ ແລະ ນໍ້າທີ່ສົກກະປົກ ແລະ ພວກເຈົ້າພຽງແຕ່ຮູ້ຈັກພຣະທຳຂອງເຮົາ, ແຕ່ໃນຄວາມເປັນຈິງແລ້ວ ພວກເຈົ້າບໍ່ໄດ້ເຂົ້າສູ່ອານາເຂດແຫ່ງອິດສະຫຼະພາບຂອງພຣະທຳຂອງເຮົາ, ສະນັ້ນ ພຣະທຳຂອງເຮົາຈຶ່ງບໍ່ໄດ້ຖືກເປີດອອກໃຫ້ແກ່ພວກເຈົ້າ; ພວກມັນເປັນຄືກັບໜັງສືຄຳທຳນາຍທີ່ຖືກປົກປິດໄວ້ເປັນເວລາຫຼາຍພັນປີ. ເຮົາປາກົດຕໍ່ພວກເຈົ້າໃນຊີວິດຂອງພວກເຈົ້າ, ແຕ່ພວກເຈົ້າບໍ່ຮູ້ຈັກສິ່ງນັ້ນຢູ່ສະເໝີ. ພວກເຈົ້າເຖິງກັບບໍ່ຮູ້ຈັກເຮົາ. ເກືອບເຄິ່ງໜຶ່ງຂອງພຣະທຳທີ່ເຮົາກ່າວແມ່ນເພື່ອພິພາກສາພວກເຈົ້າ ແລະ ພວກມັນພຽງແຕ່ບັນລຸເຄິ່ງໜຶ່ງຂອງຜົນທີ່ພວກມັນຄວນບັນລຸ ເຊິ່ງເພື່ອຊຶມຊັບຄວາມຢ້ານຢ່າງຍິ່ງພາຍໃນພວກເຈົ້າ. ອີກເຄິ່ງໜຶ່ງທີ່ຍັງເຫຼືອປະກອບມີພຣະທຳເພື່ອສັ່ງສອນພວກເຈົ້າກ່ຽວກັບຊີວິດ ແລະ ວິທີການປະພຶດຕົນເອງ. ເຖິງຢ່າງໃດກໍຕາມ ມັນຈະເບິ່ງຄືກັບວ່າ ສຳລັບພວກເຈົ້າແລ້ວ

ພຣະທຳເຫຼົ່ານີ້ບໍ່ໄດ້ມີຢູ່ຈິງ ຫຼື ຄືກັບວ່າພວກເຈົ້າກຳລັງຟັງຄຳເວົ້າຂອງເດັກນ້ອຍ, ຄຳເວົ້າທີ່ພວກເຈົ້າຍິ້ມຢູ່ໃນໃຈຢູ່ສະເໝີ, ແຕ່ບໍ່ເຄີຍປະຕິບັດຕໍ່ມັນ. ພວກເຈົ້າບໍ່ເຄີຍໃສ່ໃຈສິ່ງເຫຼົ່ານີ້ເລີຍ; ຫຼັກໆແລ້ວພວກເຈົ້າສັງເກດການກະທຳຂອງເຮົາໃນນາມຂອງຄວາມຢາກຮູ້ຢາກເຫັນເທົ່ານັ້ນ, ດ້ວຍຜົນຮັບກໍຄືຕອນນີ້ພວກເຈົ້າໄດ້ຕົກລົງສູ່ຄວາມມືດ ແລະ ບໍ່ສາມາດເຫັນແສງສະຫວ່າງ ແລະ ດ້ວຍເຫດນັ້ນພວກເຈົ້າຈຶ່ງຮ້ອງໄຫ້ຢ່າງໜ້າສົງສານໃນຄວາມມືດ. ສິ່ງທີ່ເຮົາຕ້ອງການແມ່ນຄວາມເຊື່ອຟັງຂອງພວກເຈົ້າ, ຄວາມເຊື່ອຟັງທີ່ບໍ່ມີເງື່ອນໄຂຂອງພວກເຈົ້າ ແລະ ຍິ່ງໄປກວ່ານັ້ນ ເຮົາຮຽກຮ້ອງໃຫ້ພວກເຈົ້າໝັ້ນໃຈທັງໝົດໃນທຸກສິ່ງທີ່ເຮົາເວົ້າ. ພວກເຈົ້າບໍ່ຄວນມີທ່າທີເມີນເສີຍ ແລະ ໂດຍສະເພາະແລ້ວພວກເຈົ້າບໍ່ຄວນເລືອກປະຕິບັດຕໍ່ສິ່ງຕ່າງໆທີ່ເຮົາເວົ້າ ຫຼື ບໍ່ເອົາໃຈໃສ່ຕໍ່ພຣະທຳຂອງເຮົາ ແລະພາລະກິດຂອງເຮົາ ເປັນດັ່ງນິໄສຂອງພວກເຈົ້າ. ພາລະກິດຂອງເຮົາແມ່ນດຳເນີນທ່າມກາງພວກເຈົ້າ ແລະ ເຮົາກໍໄດ້ປະທານພຣະທຳທີ່ຍິ່ງໃຫຍ່ຫຼາຍຂໍ້ຂອງເຮົາໃຫ້ແກ່ພວກເຈົ້າ, ແຕ່ຖ້າພວກເຈົ້າປະຕິບັດຕໍ່ເຮົາໃນລັກສະນະນີ້, ເຮົາກໍຈະໄດ້ແຕ່ເອົາສິ່ງທີ່ພວກເຈົ້າບໍ່ໄດ້ຮັບ ຫຼື ນຳເຂົ້າສູ່ການປະຕິບັດນັ້ນໃຫ້ແກ່ຄອບຄົວຕ່າງຊາດ. ຜູ້ໃດທ່າມກາງສິ່ງຖືກສ້າງທັງປວງບໍ່ໄດ້ຖືກເຮົາຖືໄວ້ໃນມືຂອງເຮົາ? ຫຼາຍຄົນທີ່ຢູ່ທ່າມກາງພວກເຈົ້າແມ່ນມີ "ອາຍຸແກ່" ແລະ ພວກເຈົ້າບໍ່ມີກຳລັງທີ່ຈະຍອມຮັບພາລະກິດປະເພດນີ້ທີ່ເຮົາມີ. ເຈົ້າກໍ່ເປັນຄືກັບນົກຮານເຮົາ[ກ] ທີ່ພຽງແຕ່ມີຊີວິດຢູ່ໄປວັນໆເທົ່ານັ້ນ ແລະ ເຈົ້າບໍ່ເຄີຍຈິງຈັງກັບພຣະທຳຂອງເຮົາ. ຄົນໜຸ່ມແມ່ນໄຮ້ປະໂຫຍດຢ່າງສຸດຂີດ ແລະ ໝົກມຸ້ນຫຼາຍເກີນໄປ ແລະ ເຖິງກັບສົນໃຈກັບພາລະກິດຂອງເຮົາແຕ່ໜ້ອຍດຽວ. ພວກເຂົາບໍ່ສົນໃຈທີ່ຈະກິນອາຫານແຊບໃນງານລ້ຽງຂອງເຮົາ; ພວກເຂົາເປັນຄືກັບນົກນ້ອຍທີ່ບິນອອກຈາກກົງຂອງມັນເພື່ອພະຈົນໄພໄປໄກແສນໄກ. ຄົນໜຸ່ມ ແລະ ຄົນເຖົ້າປະເພດເຫຼົ່ານີ້ຈະສາມາດເປັນປະໂຫຍດຕໍ່ເຮົາໄດ້ແນວໃດ? ຄົນອາວຸໂສແມ່ນພ້ອມທີ່ຈະໃຊ້ພຣະທຳຂອງເຮົາເປັນເບ້ຍບຳນານຈົນກວ່າພວກເຂົາຈະຢູ່ໃນຂຸມຝັງສົບຂອງພວກເຂົາ, ເພື່ອວ່າຫຼັງຈາກທີ່ພວກເຂົາຕາຍ ວິນຍານຂອງພວກເຂົາຈະສາມາດໄປສູ່ສະຫວັນ; ສຳລັບພວກເຂົາແລ້ວ, ສິ່ງນີ້ກໍພຽງພໍ. ຕອນນີ້ ຜູ້ເຖົ້າເຫຼົ່ານີ້ມີ "ຄວາມທະເຍີທະຍານຫຼາຍ" ແລະ "ຄວາມໝັ້ນໃຈທີ່ບໍ່ສັ່ນຄອນ". ເຖິງແມ່ນວ່າພວກເຂົາມີຄວາມອົດທົນຢ່າງຫຼວງຫຼາຍສຳລັບພາລະກິດຂອງເຮົາ ແລະ ມີຄຸນນະພາບຂອງຄົນເຖົ້າສຳລັບການຊື່ສັດ ແລະ ບໍ່ຍອມຈຳນົນ, ການປະຕິເສດທີ່ຈະຖືກລາກໜີ ຫຼື ຖືກເຮັດໃຫ້ພ່າຍແພ້ໂດຍຜູ້ໃດຜູ້ໜຶ່ງ ຫຼື ສິ່ງໃດສິ່ງໜຶ່ງ, ແນ່ນອນ ພວກເຂົາເປັນຄືກັບປ້ອມປະການທີ່ໜາແໜ້ນ ແຕ່ຄວາມເຊື່ອຂອງພວກເຂົາບໍ່ໄດ້ປົກຄຸມໄປດ້ວຍກິ່ນອາຍແຫ່ງຄວາມງົມງວາຍຂອງຊາກສົບ? ເສັ້ນທາງຂອງພວກເຂົາຢູ່ໃສ? ສຳລັບພວກເຂົາແລ້ວ, ເສັ້ນທາງຂອງພວກເຂົາບໍ່ໄດ້ຍາວ

ກ ເລື່ອງລາວຂອງນົກຮານເຮົານັ້ນແມ່ນຄ້າຍຄືກັນຫຼາຍກັບນິທານອີສົບ (Aesop) ທີ່ກ່ຽວກັບມົດ ແລະ ຕັກກະແຕນ. ນົກຮານເຮົາເລືອກທີ່ຈະນອນຫຼັບ ແທນທີ່ຈະສ້າງຮັງໃນຂະນະທີ່ອາກາດນັ້ນອົບອຸ່ນຢູ່, ເຖິງແມ່ນວ່າ ຈະມີຄຳຕັກເຕືອນຊໍ້າແລ້ວຊໍ້າອີກຈາກນົກກາງເຂນທີ່ເປັນເພື່ອນບ້ານຂອງມັນ. ເມື່ອລະດູໜາວມາຮອດ ນົກໂຕນັ້ນກໍແຂງກະດ້າງຕາຍ.

ປານໃດ ຫຼື ຫ່າງໄກພໍປານໃດບໍ? ພວກເຂົາຈະສາມາດຮູ້ຈັກຄວາມປະສົງຂອງເຮົາໄດ້ແນວໃດ? ເຖິງແມ່ນວ່າ ຄວາມໝັ້ນໃຈຂອງພວກເຂົາເປັນຕາສັນລະເສີນ, ມີຜູ້ອາວຸໂສເຫຼົ່ານີ້ຫຼາຍສໍ່າໃດທີ່ບໍ່ຕິດຕາມໃນເສັ້ນທາງທີ່ສັບສົນ, ແຕ່ກຳລັງສະແຫວງຫາຊີວິດຢ່າງແທ້ຈິງ? ມີເທົ່າໃດຄົນທີ່ເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງພາລະກິດຂອງເຮົາ? ຜູ້ໃດທີ່ບໍ່ມີຈຸດປະສົງເພື່ອຕິດຕາມເຮົາໃນໂລກນີ້ໃນມື້ນີ້ ເພື່ອວ່າໃນອະນາຄົດ ພວກເຂົາຈະບໍ່ຕົກສູ່ດິນແດນມໍລະນາ ແຕ່ຈະຖືກເຮົານຳໄປສູ່ອີກໂລກໜຶ່ງ? ພວກເຈົ້າຄິດວ່າຈຸດໝາຍປາຍທາງຂອງພວກເຈົ້າເປັນເລື່ອງງ່າຍໆເທົ່ານັ້ນບໍ? ເຖິງແມ່ນພວກເຈົ້າທີ່ເປັນຄົນໜຸ່ມລ້ວນແລ້ວແຕ່ຄືກັບສິງໂຕໜຸ່ມ, ແຕ່ກໍຫາໄດ້ຍາກທີ່ພວກເຈົ້າຈະມີຫົນທາງທີ່ແທ້ຈິງໃນຫົວໃຈຂອງພວກເຈົ້າ. ຄວາມໜຸ່ມຂອງພວກເຈົ້າບໍ່ໄດ້ໃຫ້ສິດເຈົ້າໃນພາລະກິດຂອງເຮົາຫຼາຍຂຶ້ນ; ໃນທາງກົງກັນຂ້າມພວກເຈົ້າເຮັດໃຫ້ເຮົາເບື່ອໜ່າຍພວກເຈົ້າຢູ່ສະເໝີ. ເຖິງແມ່ນພວກເຈົ້າຈະໜຸ່ມ, ພວກເຈົ້າກໍຂາດກຳລັງ ຫຼື ຄວາມທະເຍີທະຍານ ແລະ ພວກເຈົ້າບໍ່ອຸທິດຕໍ່ອະນາຄົດຂອງພວກເຈົ້າສະເໝີ; ມັນຄືກັບວ່າພວກເຈົ້າບໍ່ໄດ້ສົນໃຈ ແລະ ກັງວົນໃຈເລີຍ. ມັນສາມາດເວົ້າໄດ້ວ່າ ພະລັງ, ອຸດົມການ ແລະ ຈຸດຢືນທີ່ຄວນມີໃນຄົນໜຸ່ມ ແມ່ນບໍ່ສາມາດຄົ້ນພົບໃນພວກເຈົ້າໄດ້ເລີຍ; ພວກເຈົ້າຄົນໜຸ່ມປະເພດນີ້ແມ່ນປາສະຈາກຈຸດຢືນ ແລະ ບໍ່ມີຄວາມສາມາດໃນການແຍກແຍະລະຫວ່າງຄວາມຖືກຕ້ອງ ແລະ ຄວາມຜິດ, ຄວາມດີ ແລະ ຄວາມຊົ່ວຮ້າຍ, ຄວາມສວຍງາມ ແລະ ຄວາມຂີ້ຮ້າຍ. ມັນເປັນໄປບໍ່ໄດ້ທີ່ຈະຄົ້ນພົບອົງປະກອບໃດໆທີ່ສົດໃສໃນພວກເຈົ້າ. ພວກເຈົ້າເກືອບຫົວບູຮານທັງສິ້ນ ແລະ ພວກເຈົ້າ ເຊິ່ງເປັນຄົນໜຸ່ມປະເພດນີ້ ຍັງໄດ້ຮຽນຕິດຕາມຝູງຊົນ, ກາຍເປັນຄົນບໍ່ມີເຫດຜົນ. ພວກເຈົ້າບໍ່ສາມາດແຍກແຍະຄວາມດີຈາກຄວາມຊົ່ວໄດ້ຢ່າງຊັດເຈນ, ບໍ່ສາມາດແຍກແຍະລະຫວ່າງສິ່ງທີ່ຖືກຕ້ອງ ແລະ ສິ່ງທີ່ບໍ່ຖືກຕ້ອງ, ບໍ່ເຄີຍພະຍາຍາມເພື່ອຄວາມດີເລີດ ແລະ ພວກເຈົ້າບໍ່ສາມາດບອກໄດ້ວ່າແມ່ນຫຍັງຖືກຕ້ອງ ແລະ ແມ່ນຫຍັງຜິດ, ແມ່ນຫຍັງຄືຄວາມຈິງ ແລະ ແມ່ນຫຍັງຄືການຫຼອກລວງ. ພວກເຈົ້າມີກິ່ນເໝັນຂອງສາສະໜາທີ່ໜັກໜ່ວງ ແລະ ຮຸນແຮງຫຼາຍກວ່າຜູ້ເຖົ້າອີກ. ພວກເຈົ້າເຖິງກັບອວດດີ ແລະ ໄຮ້ເຫດຜົນ, ພວກເຈົ້າມັກແຂ່ງຂັນ ແລະ ຄວາມມັກຮັກໃນການຄຸກຄາມຂອງພວກເຈົ້າແມ່ນຮຸນແຮງຫຼາຍ, ຄົນໜຸ່ມປະເພດນີ້ຈະສາມາດມີຄວາມຈິງໄດ້ແນວໃດ? ຄົນທີ່ບໍ່ສາມາດຍຶດໝັ້ນໃນຈຸດຢືນຈະສາມາດເປັນພະຍານໄດ້ແນວໃດ? ຄົນທີ່ບໍ່ມີຄວາມສາມາດແຍກແຍະລະຫວ່າງສິ່ງທີ່ຖືກຕ້ອງ ແລະ ຜິດຈະສາມາດຖືກເອີ້ນວ່າຄົນໜຸ່ມໄດ້ແນວໃດ? ຄົນທີ່ບໍ່ມີກຳລັງ, ຄວາມແຂງແຮງ, ຄວາມສົດໃສ, ຄວາມໃຈເຢັນ ແລະ ຄວາມໝັ້ນຄົງຂອງຄົນໜຸ່ມຈະສາມາດຖືກເອີ້ນວ່າຜູ້ຕິດຕາມຂອງເຮົາໄດ້ແນວໃດ? ຄົນທີ່ບໍ່ມີຄວາມຈິງ, ບໍ່ມີຄວາມຮູ້ສຶກເຖິງຄວາມຍຸຕິທຳ, ແຕ່ມັກຫຼິ້ນ ແລະ ຕົບຕີກັນຈະສົມຄວນເປັນຄົນພະຍານຂອງເຮົາໄດ້ແນວໃດ? ສາຍຕາທີ່ເຕັມໄປດ້ວຍຄວາມຫຼອກລວງ ແລະ ອະຄະຕິຕໍ່ຄົນອື່ນບໍ່ແມ່ນສິ່ງທີ່ຄົນໜຸ່ມຄວນມີ ແລະ ຄົນໜຸ່ມບໍ່ຄວນປະຕິບັດການກະທຳທີ່ບໍ່ດີ ແລະ ຕໍ່າຊ້າ. ພວກເຂົາບໍ່ຄວນປາສະຈາກອຸດົມການ, ຄວາມປະຖະໜາທີ່ທະເຍີທະຍານ ແລະ ກະຕືລືລົ້ນເພື່ອເຮັດໃຫ້ຕົນເອງດີຂຶ້ນ; ພວກເຂົາບໍ່ຄວນໝົດກຳລັງໃຈກ່ຽວກັບຄວາມຄາດຫວັງຂອງພວກເຂົາ ຫຼື ພວກເຂົາບໍ່ຄວນສູນເສຍຄວາມຫວັງໃນຊີວິດ ຫຼື ຄວາມໝັ້ນໃຈໃນອະນາຄົດ; ພວກເຂົາຄວນມີຄວາມພາກ

ພຽນເພື່ອສືບຕໍ່ຕາມເສັ້ນທາງແຫ່ງຄວາມຈິງທີ່ພວກເຂົາໄດ້ເລືອກໃນຕອນນີ້ ນັ້ນກໍຄື ການປະຕິບັດຕາມຄວາມປາຖະໜາຂອງພວກເຂົາເພື່ອສະຫຼະຊີວິດທັງໝົດຂອງພວກເຂົາໃຫ້ແກ່ເຮົາ. ພວກເຂົາບໍ່ຄວນປາສະຈາກຄວາມຈິງ ຫຼື ພວກເຂົາບໍ່ຄວນເຊື່ອງຄວາມຫຼອກລວງ ແລະ ຄວາມບໍ່ຊອບທຳ, ພວກເຂົາຄວນຍຶດໝັ້ນໃນຈຸດຢືນທີ່ຖືກຕ້ອງ. ພວກເຂົາບໍ່ຄວນລ່ອງລອຍໄປມາເທົ່ານັ້ນ, ແຕ່ຄວນມີຈິດໃຈທີ່ຈະກ້າເສຍສະຫຼະ ແລະ ພະຍາຍາມຫາຄວາມຍຸຕິທຳ ແລະ ຄວາມຈິງ. ຄົນໜຸ່ມຄວນມີຄວາມກ້າຫານທີ່ຈະບໍ່ຍອມຈຳນົນຕໍ່ການກົດຂີ່ໂດຍອຳນາດແຫ່ງຄວາມມືດ ແລະ ເພື່ອປ່ຽນແປງຄວາມໝາຍຂອງການເປັນຢູ່ຂອງພວກເຂົາ. ຄົນໜຸ່ມບໍ່ຄວນຍອມຈຳນົນໃຫ້ແກ່ຄວາມລຳບາກຍາກແຄ້ນ, ແຕ່ຄວນເປີດເຜີຍ ແລະ ກົງໄປກົງມາ ດ້ວຍຈິດໃຈແຫ່ງການໃຫ້ອະໄພສຳລັບອ້າຍເອື້ອຍນ້ອງຂອງພວກເຂົາ. ແນ່ນອນ ສິ່ງເຫຼົ່ານີ້ແມ່ນສິ່ງທີ່ເຮົາຮຽກຮ້ອງຈາກທຸກຄົນ ແລະ ຄຳແນະນຳຂອງເຮົາສຳລັບທຸກຄົນ. ແຕ່ຍິ່ງໄປກວ່ານັ້ນ ສິ່ງເຫຼົ່ານີ້ແມ່ນພຣະທຳທີ່ປອບໂຍນຂອງເຮົາສຳລັບຄົນໜຸ່ມທຸກຄົນ. ພວກເຈົ້າຄວນປະຕິບັດຕາມພຣະທຳຂອງເຮົາ. ໂດຍສະເພາະແລ້ວ ຄົນໜຸ່ມບໍ່ຄວນປາສະຈາກຄວາມຕັ້ງໃຈທີ່ຈະແຍກແຍະໃນບັນຫາຕ່າງໆ ແລະ ສະແຫວງຫາຄວາມຍຸຕິທຳ ແລະ ຄວາມຈິງ. ພວກເຈົ້າຄວນສະແຫວງຫາທຸກສິ່ງທີ່ສວຍງາມ ແລະ ດີ ແລະ ພວກເຈົ້າຄວນຮັບເອົາຄວາມເປັນຈິງຂອງທຸກສິ່ງທີ່ເປັນບວກ. ພວກເຈົ້າຄວນຮັບຜິດຊອບຊີວິດຂອງພວກເຈົ້າ ແລະ ພວກເຈົ້າຕ້ອງບໍ່ຖືເບົາ. ຜູ້ຄົນມາເທິງໂລກ ແລະ ມັນກໍຫາໄດ້ຍາກທີ່ຈະພົບພໍ້ກັບເຮົາ ແລະ ມັນຍັງຫາໄດ້ຍາກທີ່ຈະມີໂອກາດສະແຫວງຫາ ແລະ ຮັບເອົາຄວາມຈິງ. ເປັນຫຍັງພວກເຈົ້າຈຶ່ງບໍ່ປະເມີນຄ່າເວລາທີ່ສວຍງາມນີ້ວ່າເປັນເສັ້ນທາງທີ່ຖືກຕ້ອງເພື່ອສະແຫວງຫາໃນຊີວິດນີ້? ແລ້ວເປັນຫຍັງພວກເຈົ້າຈຶ່ງບໍ່ໃຫ້ຄວາມສົນໃຈຕໍ່ຄວາມຈິງ ແລະ ຄວາມຍຸຕິທຳ? ເປັນຫຍັງພວກເຈົ້າຈຶ່ງຢຽບຢໍ່າ ແລະ ທຳລາຍຕົນເອງເພື່ອຄວາມບໍ່ຊອບທຳ ແລະ ຄວາມສົກກະປົກທີ່ຫຼິ້ນຕະຫຼົກກັບຜູ້ຄົນຢູ່ສະເໝີ? ແລ້ວເປັນຫຍັງເຈົ້າຈຶ່ງເຮັດຄືກັບຜູ້ເຖົ້າເຫຼົ່ານັ້ນທີ່ເຮັດໃນສິ່ງທີ່ຄົນບໍ່ຊອບທຳເຮັດ? ເປັນຫຍັງເຈົ້າຈຶ່ງຮຽນແບບວິທີເດີມໆຂອງສິ່ງເດີມໆ? ຊີວິດຂອງພວກເຈົ້າຄວນເຕັມໄປດ້ວຍຄວາມຍຸຕິທຳ, ຄວາມຈິງ ແລະ ຄວາມບໍລິສຸດ; ຊີວິດຂອງພວກເຈົ້າບໍ່ຄວນເສື່ອມໂຊມຫຼາຍໃນອາຍຸໜຸ່ມນ້ອຍຂະໜາດນີ້, ເຊິ່ງມັນຈະນຳພວກເຈົ້າໄປສູ່ແດນມໍລະນາ. ພວກເຈົ້າບໍ່ຮູ້ສຶກວ່າ ສິ່ງນີ້ຈະເປັນຄວາມໂຊກຮ້າຍຢ່າງໃຫຍ່ຫຼວງບໍ? ພວກເຈົ້າບໍ່ຮູ້ສຶກວ່າສິ່ງນີ້ບໍ່ຍຸຕິທຳຢ່າງໃຫຍ່ບໍ?

ພວກເຈົ້າທຸກຄົນຄວນປະຕິບັດພາລະກິດທີ່ສົມບູນແບບຂອງພວກເຈົ້າທັງໝົດ ແລະ ຖວາຍມັນເທິງແທ່ນບູຊາຂອງເຮົາ, ເຮັດໃຫ້ມັນເປັນການຖວາຍສຸດທ້າຍ ແລະ ມີເອກະລັກ ທີ່ພວກເຈົ້າຖວາຍໃຫ້ແກ່ເຮົາ. ພວກເຈົ້າທຸກຄົນຄວນຍຶດໝັ້ນໃນຈຸດຢືນຂອງພວກເຈົ້າເອງ ແລະ ບໍ່ພັດປິວໄປມາດ້ວຍສາຍລົມທຸກສາຍທີ່ພັດຜ່ານມາຄືກັບກ້ອນເມກໃນທ້ອງຟ້າ. ເຈົ້າເຮັດວຽກໜັກເປັນເວລາເຄິ່ງຊີວິດຂອງເຈົ້າ, ແລ້ວເປັນຫຍັງເຈົ້າຈຶ່ງບໍ່ສະແຫວງຫາຈຸດໝາຍປາຍທາງທີ່ເຈົ້າຄວນມີ? ເຈົ້າເຮັດວຽກໜັກເປັນເວລາເຄິ່ງຊີວິດ, ແຕ່ເຈົ້າປ່ອຍໃຫ້ພໍ່ແມ່ຂອງເຈົ້າທີ່ເປັນຄືກັບໝູ ແລະ ໝານັ້ນລາກຄວາມຈິງ ແລະ ຄວາມໝາຍຂອງການເປັນຢູ່ສ່ວນຕົວຂອງເຈົ້າເຂົ້າສູ່ຂຸມຝັງສົບ. ເຈົ້າບໍ່ຄິດບໍວ່າ ນີ້ແມ່ນຄວາມ

ອະຍຸຕິທຳອັນໃຫຍ່ຫຼວງສຳລັບເຈົ້າ? ເຈົ້າບໍ່ຮູ້ສຶກບໍວ່າ ການດຳລົງຊີວິດໃນລັກສະນະນີ້ແມ່ນບໍ່ມີຄວາມໝາຍຫຍັງທັງສິ້ນ? ການສະແຫວງຫາຄວາມຈິງ ແລະ ເສັ້ນທາງທີ່ຖືກຕ້ອງໃນລັກສະນະນີ້ຈະຈົບລົງດ້ວຍການສ້າງບັນຫາ, ເຮັດໃຫ້ເພື່ອນບ້ານອຶດອັດໃຈ ແລະ ຄອບຄົວທັງໝົດກໍບໍ່ມີຄວາມສຸກ ແລະ ມັນຈະນຳໄປສູ່ໄພພິບັດທີ່ຮ້າຍແຮ້ງ. ຖ້າເຈົ້າດຳລົງຊີວິດແບບນີ້, ມັນຈະບໍ່ເທົ່າກັບການມີຊີວິດທີ່ບໍ່ມີຄວາມໝາຍທີ່ສຸດບໍ? ຊີວິດຜູ້ໃດໂຊກດີໄປຫຼາຍກວ່າເຈົ້າ ແລະ ຊີວິດຜູ້ໃດຈະເປັນຕາຫົວໄປຫຼາຍກວ່າເຈົ້າ? ເຈົ້າບໍ່ໄດ້ສະແຫວງຫາເຮົາເພື່ອຮັບເອົາຄວາມຍິນດີຈາກເຮົາ ແລະ ພຣະທຳແຫ່ງການປອບໂຍນສຳລັບເຈົ້າບໍ? ແຕ່ຫຼັງຈາກທີ່ເຈົ້າໄດ້ແລ່ນໄປມາເປັນເວລາເຄິ່ງຊີວິດ, ເຈົ້າທ້າທາຍເຮົາ ຈົນເຮົາເຕັມໄປດ້ວຍຄວາມໂກດຮ້າຍ ແລະ ບໍ່ສົນໃຈກັບເຈົ້າ ຫຼື ສັນລະເສີນເຈົ້າ, ສິ່ງນີ້ບໍ່ໄດ້ໝາຍຄວາມວ່າ ຊີວິດທັງໝົດຂອງເຈົ້າສູນເປົ່າບໍ? ເຈົ້າຈະມີໜ້າໄປພົບກັບວິນຍານຂອງໄພ່ພົນເຫຼົ່ານັ້ນໃນຍຸກຕ່າງໆ ຜູ້ທີ່ຖືກປ່ອຍອອກມາຈາກບ່ອນລ້າງບາບບໍ? ເຈົ້າບໍ່ໄດ້ສົນໃຈເຮົາ ແລະ ໃນທີ່ສຸດ ເຈົ້າເຮັດໃຫ້ເກີດໄພພິບັດທີ່ຮ້າຍແຮງ, ມັນຈະດີກວ່າທີ່ຈະນຳໃຊ້ໂອກາດນີ້ ແລະ ເດີນທາງຢ່າງມີຄວາມສຸກໄປທົ່ວມະຫາສະໝຸດອັນກວ້າງໃຫຍ່ ແລະ ຫຼັງຈາກນັ້ນກໍເຊື່ອຟັງ “ການມອບໝາຍ” ຂອງເຮົາ. ເຮົາບອກພວກເຈົ້າແຕ່ດົນມາແລ້ວວ່າ ໃນປັດຈຸບັນຍ້ອນເຈົ້າບໍ່ສົນໃຈ ແຕ່ບໍ່ເຕັມໃຈທີ່ຈະຈາກໄປ ເຈົ້າຈຶ່ງຈະຖືກຈົມລົງໃນທີ່ສຸດ ແລະ ຖືກກືນກິນໂດຍຄື້ນທີ່ເຮົາໄດ້ສ້າງຂຶ້ນ. ພວກເຈົ້າສາມາດປົກປ້ອງຕົນເອງໄດ້ແທ້ບໍ? ເຈົ້າໝັ້ນໃຈແທ້ບໍວ່າ ວິທີການສະແຫວງຫາໃນປັດຈຸບັນຂອງເຈົ້າຈະຮັບປະກັນວ່າ ເຈົ້າຈະຖືກເຮັດໃຫ້ສົມບູນ? ຫົວໃຈຂອງເຈົ້າບໍ່ໄດ້ແຂງກະດ້າງບໍ? ການຕິດຕາມປະເພດນີ້, ການສະແຫວງຫາປະເພດນີ້, ຊີວິດປະເພດນີ້ ແລະ ບຸກຄະລິກປະເພດນີ້, ມັນຈະສາມາດໄດ້ຮັບການສັນລະເສີນຂອງເຮົາໄດ້ແນວໃດ?

# ເຈົ້າຄວນຮູ້ວ່າ ມະນຸດຊາດທັງໝົດ ໄດ້ພັດທະນາມາຮອດມື້ນີ້ໄດ້ແນວໃດ

ພາລະກິດທັງໝົດທີ່ດຳເນີນມາຫຼາຍກວ່າຫົກພັນປີ ໄດ້ມີການປ່ຽນແປງເທື່ອລະໜ້ອຍຕາມຍຸກສະໄໝຕ່າງໆທີ່ຜ່ານມາ ແລະ ຜ່ານໄປ. ການປ່ຽນແປງໃນພາລະກິດນີ້ໄດ້ເກີດຂຶ້ນ ໂດຍອີງຕາມສະຖານະການໂດຍລວມຂອງໂລກ ແລະ ຕາມແນວໂນ້ມການພັດທະນາຂອງມະນຸດໂດຍລວມ; ພາລະກິດແຫ່ງການຄຸ້ມຄອງກໍພຽງແຕ່ປ່ຽນແປງຕາມນັ້ນເທື່ອລະໜ້ອຍ. ທັງໝົດບໍ່ໄດ້ມີການວາງແຜນໄວ້ໃນຕອນທີ່ເລີ່ມຕົ້ນຂອງການສ້າງ. ກ່ອນທີ່ໂລກຈະຖືກສ້າງຂຶ້ນ ຫຼື ຫຼັງຈາກທີ່ໄດ້ຖືກສ້າງຂຶ້ນໃນບໍ່ດົນ, ພຣະເຢໂຮວາຍັງບໍ່ໄດ້ວາງແຜນຂັ້ນຕອນທຳອິດຂອງພາລະກິດ, ຂັ້ນຕອນແຫ່ງພຣະບັນຍັດ; ຂັ້ນຕອນທີສອງຂອງພາລະກິດ ແມ່ນຂັ້ນຕອນແຫ່ງພຣະຄຸນ; ຫຼື ຂັ້ນຕອນທີສາມຂອງພາລະກິດ ແມ່ນຂັ້ນຕອນແຫ່ງການເອົາຊະນະ, ເຊິ່ງພຣະອົງຈະເລີ່ມຕົ້ນດ້ວຍເຊື້ອສາຍຂອງໂມອາບກ່ອນ ແລະ ຜ່ານວິທີການນີ້ ພຣະອົງຈະເອົາຊະນະຈັກກະວານທັງປວງ. ຫຼັງຈາກທີ່ໄດ້ສ້າງແຜ່ນດິນໂລກ ພຣະອົງບໍ່ໄດ້ກ່າວພຣະທຳເຫຼົ່ານີ້ ຫຼື ພຣະອົງບໍ່ໄດ້ກ່າວພຣະທຳເຫຼົ່ານີ້ຫຼັງຈາກໂມອາບ; ແນ່ນອນກ່ອນໜ້າໂລດພຣະອົງກໍບໍ່ເຄີຍກ່າວພຣະທຳເຫຼົ່ານີ້. ພາລະກິດທັງໝົດຖືກປະຕິບັດຢ່າງເປັນທຳມະຊາດ. ນີ້ແມ່ນວິທີທີ່ພາລະກິດແຫ່ງການຄຸ້ມຄອງຫົກພັນປີຂອງພຣະອົງໄດ້ພັດທະນາ; ກ່ອນສ້າງໂລກ ພຣະອົງຈະເຄີຍຂຽນແຜນການດັ່ງກ່າວຂຶ້ນເປັນຮູບຮ່າງຄືກັບ "ຕາຕະລາງສະຫຼຸບສຳລັບການພັດທະນາຂອງມະນຸດຊາດ". ໃນພາລະກິດຂອງພຣະເຈົ້າ, ພຣະອົງສະແດງສິ່ງທີ່ພຣະອົງເປັນໂດຍກົງ; ພຣະອົງບໍ່ໄດ້ພະຍາຍາມຄິດຢ່າງໜັກເພື່ອສ້າງແຜນການຂຶ້ນ. ແນ່ນອນ ຜູ້ປະກາດພຣະທຳຈຳນວນເລັກນ້ອຍຄົນໄດ້ກ່າວຄຳທຳນາຍອັນຍິ່ງໃຫຍ່ຫຼາຍຢ່າງ ແຕ່ມັນກໍຍັງບໍ່ສາມາດເວົ້າໄດ້ວ່າ ພາລະກິດຂອງພຣະເຈົ້າແມ່ນໜຶ່ງໃນການວາງແຜນການທີ່ຊັດເຈນຢູ່ສະເໝີ; ຄຳທຳນາຍເຫຼົ່ານັ້ນຖືກສ້າງຂຶ້ນຕາມພາລະກິດຂອງພຣະເຈົ້າໃນເວລານັ້ນ. ພາລະກິດທັງໝົດທີ່ພຣະອົງປະຕິບັດ ແມ່ນພາລະກິດທີ່ແທ້ຈິງທີ່ສຸດ. ພຣະອົງດຳເນີນພາລະກິດຂອງພຣະອົງຕາມການພັດທະນາໃນແຕ່ລະຍຸກສະໄໝ ແລະ ອີງພາລະກິດນັ້ນຕາມວິທີທີ່ສິ່ງຕ່າງໆປ່ຽນແປງ. ສຳລັບພຣະອົງແລ້ວ, ການດຳເນີນພາລະກິດແມ່ນຄ້າຍຄືກັບການຈັດຢາເພື່ອປິ່ນປົວຄວາມເຈັບປ່ວຍ; ໃນຂະນະທີ່ປະຕິບັດພາລະກິດຂອງພຣະອົງ, ພຣະອົງສັງເກດການ ແລະ ສືບຕໍ່ພາລະກິດຂອງພຣະອົງຕາມການສັງເກດການຂອງພຣະອົງ. ໃນທຸກຂັ້ນຕອນ ຂອງພາລະກິດຂອງພຣະອົງ, ພຣະເຈົ້າແມ່ນສາມາດສະແດງສະຕິປັນຍາອັນອຸດົມສົມບູນ ແລະ ຄວາມສາມາດຂອງພຣະອົງ; ພຣະອົງເປີດເຜີຍສະຕິປັນຍາອັນຫຼວງຫຼາຍ ແລະ ອຳນາດຂອງພຣະອົງ ຕາມພາລະກິດຂອງຍຸກສະໄໝໃດໜຶ່ງ ແລະ ອະນຸຍາດໃຫ້ທຸກຄົນທີ່ພຣະອົງໄດ້ນຳກັບຄືນມາໃນຍຸກເຫຼົ່ານີ້ໄດ້ເຫັນອຸປະນິໄສທັງໝົດຂອງພຣະອົງ. ພຣະອົງສະໜອງໃຫ້ແກ່ຄວາມຕ້ອງການຂອງຜູ້ຄົນຕາມພາລະກິດທີ່ຕ້ອງໄດ້ເຮັດໃນແຕ່ລະຍຸກໂດຍປະຕິບັດພາລະກິດໃດກໍຕາມທີ່ພຣະອົງຄວນປະຕິບັດ. ພຣະອົງສະໜອງໃຫ້ແກ່ຜູ້ຄົນດ້ວຍສິ່ງທີ່ພວກເຂົາຕ້ອງການ ໂດຍອີງຕາມລະດັບຂອງຄວາມເສື່ອມຊາມທີ່ຊາຕານໄດ້ເຮັດຕໍ່ພວກເຂົາ. ເມື່ອ

ພຣະເຢໂຮວາສ້າງອາດາມ ແລະ ເອວາໃນເບື້ອງຕົ້ນ ມັນເປັນຄືກັບວ່າພຣະອົງເຮັດແບບນັ້ນເພື່ອເຮັດໃຫ້ພວກເຂົາສາມາດສະແດງເຖິງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກ ແລະ ເພື່ອວ່າພວກເຂົາຈະສາມາດເປັນພະຍານຂອງພຣະເຈົ້າໃນທ່າມກາງການຊົງສ້າງ. ເຖິງຢ່າງໃດກໍຕາມ ເອວາໄດ້ເຮັດບາບຫຼັງຈາກຖືກລໍ້ລວງດ້ວຍງູ ແລະ ອາດາມກໍໄດ້ເຮັດບາບເຊັ່ນກັນ; ຢູ່ໃນສວນ ພວກເຂົາທັງສອງໄດ້ກິນໝາກໄມ້ຈາກຕົ້ນໄມ້ທີ່ເຮັດໃຫ້ຮູ້ຈັກດີ ແລະ ຊົ່ວ. ດ້ວຍເຫດນັ້ນ, ພຣະເຢໂຮວາຈຶ່ງໄດ້ມີພາລະກິດເພີ່ມເຕີມທີ່ຕ້ອງປະຕິບັດໃນພວກເຂົາ. ເມື່ອເຫັນພວກເຂົາເປືອຍກາຍ, ພຣະອົງກໍປົກປິດຮ່າງກາຍຂອງພວກເຂົາດ້ວຍເສື້ອຜ້າທີ່ເຮັດຈາກໜັງສັດ. ຫຼັງຈາກນັ້ນ, ພຣະອົງກໍໄດ້ກ່າວຕໍ່ອາດາມວ່າ: "ຍ້ອນເຈົ້າໄດ້ຟັງຄວາມເມຍເຈົ້າ ແລະ ໄດ້ກິນຈາກຕົ້ນໄມ້ນັ້ນ ເຊິ່ງເຮົາໄດ້ສັ່ງຫ້າມເຈົ້າແລ້ວ ໂດຍກ່າວວ່າ ເຈົ້າຕ້ອງບໍ່ກິນຈາກຕົ້ນໄມ້ນັ້ນ: ແຜ່ນດິນຈະຖືກສາບແຊ່ງຍ້ອນເຈົ້າ... ຈົນກວ່າເຈົ້າຄືນໄປສູ່ດິນ; ຍ້ອນເຈົ້າກໍມາຈາກດິນ: ເຈົ້າຖືກສ້າງຈາກດິນ ແລະ ເຈົ້າຈະກັບຄືນໄປເປັນດິນອີກ". ພຣະອົງໄດ້ກ່າວກັບຜູ້ຍິງວ່າ: "ເຮົາຈະເພີ່ມທະວີຄວາມເຈັບປວດຂອງເຈົ້າ ແລະ ຄວາມຫຍຸ້ງຍາກໃນການຕັ້ງທ້ອງເປັນຢ່າງຍິ່ງ; ເຈົ້າຈະເກີດລູກດ້ວຍຄວາມເຈັບປວດ; ຄວາມປາຖະໜາຂອງເຈົ້າຈະຕ້ອງເປັນຜົວຂອງເຈົ້າ ແລະ ລາວຈະປົກຄອງເຈົ້າເອງ". ຫຼັງຈາກນັ້ນເປັນຕົ້ນມາ ພຣະອົງກໍໄດ້ເນລະເທດພວກເຂົາອອກຈາກສວນເອເດນ ແລະ ເຮັດໃຫ້ພວກເຂົາດຳລົງຊີວິດຢູ່ນອກສວນ ຄືກັບດຽວນີ້ທີ່ມະນຸດສະໄໝໃໝ່ອາໄສຢູ່ເທິງແຜ່ນໂລກ. ເມື່ອພຣະເຈົ້າສ້າງມະນຸດໃນຕອນເລີ່ມຕົ້ນ, ມັນບໍ່ແມ່ນແຜນການຂອງພຣະອົງທີ່ຈະປ່ອຍໃຫ້ມະນຸດຖືກລໍ້ລວງດ້ວຍງູຫຼັງຈາກທີ່ຖືກສ້າງຂຶ້ນ ແລະ ສາບແຊ່ງມະນຸດ ແລະ ງູໃນພາຍຫຼັງ. ໃນຄວາມຈິງແລ້ວ ພຣະອົງບໍ່ໄດ້ມີແຜນການດັ່ງກ່າວເລີຍ; ມັນເປັນພຽງການພັດທະນາຂອງສິ່ງຕ່າງໆທີ່ເຮັດໃຫ້ພຣະອົງຕ້ອງມີພາລະກິດໃໝ່ເພື່ອປະຕິບັດທ່າມກາງສິ່ງຊົງສ້າງຂອງພຣະອົງ. ຫຼັງຈາກທີ່ພຣະເຢໂຮວາໄດ້ປະຕິບັດພາລະກິດນີ້ທ່າມກາງອາດາມ ແລະ ເອວາຢູ່ເທິງແຜ່ນດິນໂລກ, ມະນຸດຊາດກໍໄດ້ສືບຕໍ່ພັດທະນາເປັນເວລາຫຼາຍພັນປີ ຈົນ: "ພຣະເຢໂຮວາເຫັນວ່າ ຄວາມຊົ່ວຮ້າຍຂອງມະນຸດນັ້ນຍິ່ງໃຫຍ່ຫຼາຍຢູ່ເທິງແຜ່ນດິນໂລກ ແລະ ທຸກສິ່ງທີ່ຈິນຕະນາການມາຈາກຄວາມຄິດຂອງຫົວໃຈຂອງເຂົາເປັນສິ່ງທີ່ຊົ່ວຮ້າຍຢ່າງຕໍ່ເນື່ອງ. ສິ່ງນັ້ນເຮັດໃຫ້ພຣະເຢໂຮວາຮູ້ສຶກເສຍໃຈທີ່ພຣະອົງໄດ້ສ້າງມະນຸດເທິງແຜ່ນດິນໂລກ ແລະ ສິ່ງນັ້ນເຮັດໃຫ້ພຣະອົງໂສກເສົ້າເສຍໃຈໃນຫົວໃຈຂອງພຣະອົງ... ແຕ່ໂນອາເປັນທີ່ພໍໃຈໃນສາຍຕາຂອງພຣະເຢໂຮວາ". ໃນເວລານີ້ ພຣະເຢໂຮວາມີພາລະກິດໃໝ່ຫຼາຍຂຶ້ນໃຫ້ປະຕິບັດ ເພາະວ່າມະນຸດຊາດທີ່ພຣະອົງໄດ້ສ້າງຂຶ້ນ ໄດ້ມີບາບຫຼາຍເກີນໄປຫຼັງຈາກທີ່ຖືກງູລໍ້ລວງ. ຈາກສະຖານະການເຫຼົ່ານີ້, ໃນບັນດາມະນຸດຊາດທັງປວງ ພຣະເຢໂຮວາຈຶ່ງໄດ້ເລືອກຄອບຄົວຂອງໂນອາເພື່ອລະເວັ້ນພວກເຂົາ ແລະ ຫຼັງຈາກນັ້ນພຣະອົງກໍດຳເນີນພາລະກິດຂອງພຣະອົງໃນການທຳລາຍໂລກດ້ວຍນໍ້າຖ້ວມ. ມວນມະນຸດຍັງສືບຕໍ່ພັດທະນາໃນລັກສະນະນີ້ຈົນມາຮອດທຸກມື້ນີ້ ໂດຍມີຄວາມເສື່ອມຊາມຫຼາຍຂຶ້ນ ແລະ ເມື່ອເວລາແຫ່ງການພັດທະນາຂອງມະນຸດໄປເຖິງຈຸດສູງສຸດຂອງມັນ, ມັນກໍຈະໝາຍເຖິງຈຸດສິ້ນສຸດຂອງມະນຸດຊາດ. ຈາກຈຸດເລີ່ມຕົ້ນຈົນເຖິງຈຸດສິ້ນສຸດຂອງໂລກ, ຄວາມຈິງພາຍໃນພາລະກິດຂອງພຣະອົງແມ່ນເປັນແບບນີ້ ແລະ ຈະເປັນແບບນີ້ຢູ່ສະເໝີ. ມັນຄືກັນກັບ

ວິທີການ ຈຳແນກຜູ້ຄົນຕາມປະເພດຂອງພວກເຂົາ; ມັນຫ່າງໄກຈາກຄວາມຈິງທີ່ວ່າແຕ່ລະຄົນໄດ້ຖືກກຳນົດຊະຕາກຳໄວ້ແຕ່ເບື້ອງຕົ້ນເພື່ອຕົກຢູ່ໃນປະເພດໃດໜຶ່ງ; ກົງກັນຂ້າມ ທຸກຄົນຈະຖືກຈັດປະເພດເທື່ອລະໜ້ອຍ ຫຼັງຈາກທີ່ໄດ້ຜ່ານຂະບວນການພັດທະນາເທົ່ານັ້ນ. ໃນທີ່ສຸດ, ຜູ້ໃດກໍຕາມທີ່ບໍ່ສາມາດໄດ້ຮັບຄວາມລອດພົ້ນຢ່າງສົມບູນກໍຈະຖືກສົ່ງກັບໄປຫາ "ບັນພະບຸລຸດ" ຂອງພວກເຂົາ. ບໍ່ມີພາລະກິດໃດຂອງພຣະເຈົ້າທີ່ຢູ່ທ່າມກາງມະນຸດຊາດຖືກກະກຽມໄວ້ໃນຕອນສ້າງໂລກ; ໃນທາງກົງກັນຂ້າມ, ມັນແມ່ນການພັດທະນາຂອງສິ່ງຕ່າງໆທີ່ເຮັດໃຫ້ພຣະເຈົ້າປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດຊາດເທື່ອລະບາດກ້າວ ແລະ ໃນລັກສະນະທີ່ເປັນຈິງ ແລະ ໃນພາກປະຕິບັດຫຼາຍຂຶ້ນ. ຍົກຕົວຢ່າງ: ພຣະເຢໂຮວາບໍ່ໄດ້ສ້າງງູເພື່ອໃຫ້ມາລໍ້ລວງແມ່ຍິງ; ນັ້ນບໍ່ແມ່ນແຜນການສະເພາະຂອງພຣະອົງ ຫຼື ມັນບໍ່ແມ່ນສິ່ງທີ່ພຣະອົງໄດ້ຕັ້ງໃຈກຳນົດໄວ້ລ່ວງໜ້າ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ນີ້ແມ່ນເຫດການທີ່ບໍ່ໄດ້ຄາດການໄວ້ກ່ອນ. ສະນັ້ນ ມັນເປັນຍ້ອນເຫດນີ້ ພຣະເຢໂຮວາຈຶ່ງໄດ້ຂັບໄລ່ອາດາມ ແລະ ເອວາອອກຈາກສວນເອເດນ ແລະ ສາບານທີ່ຈະບໍ່ສ້າງມະນຸດອີກເລີຍ. ເຖິງຢ່າງໃດກໍຕາມ ຜູ້ຄົນພຽງແຕ່ຄົ້ນພົບສະຕິປັນຍາຂອງພຣະເຈົ້າບົນພື້ນຖານນີ້. ມັນເປັນດັ່ງທີ່ເຮົາໄດ້ກ່າວໄວ້ກ່ອນໜ້ານີ້ວ່າ: "ເຮົາໃຊ້ສະຕິປັນຍາຂອງເຮົາ ໂດຍອີງຕາມກົນອຸບາຍຂອງຊາຕານ". ບໍ່ວ່າມະນຸດຊາດຈະເສື່ອມຊາມເທົ່າໃດ ຫຼື ງູຈະລໍ້ລວງພວກເຂົາແນວໃດກໍຕາມ, ພຣະເຢໂຮວາກໍຍັງມີສະຕິປັນຍາຂອງພຣະອົງ; ເພາະສະນັ້ນ, ພຣະອົງຈຶ່ງໄດ້ກະທຳພາລະກິດໃໝ່ນັບຕັ້ງແຕ່ທີ່ພຣະອົງໄດ້ສ້າງໂລກ ແລະ ບໍ່ມີບາດກ້າວໃດໃນພາລະກິດນີ້ຖືກເຮັດຊໍ້າຄືນອີກ. ຊາຕານໄດ້ສືບຕໍ່ເຮັດກົນອຸບາຍຢ່າງຕໍ່ເນື່ອງ, ມະນຸດຊາດແມ່ນຖືກເຮັດໃຫ້ເສື່ອມຊາມຢ່າງຕໍ່ເນື່ອງໂດຍຊາຕານ ແລະ ພຣະເຈົ້າເຢໂຮວາກໍໄດ້ດຳເນີນພາລະກິດມີສະຕິປັນຍາຂອງພຣະອົງຢ່າງບໍ່ຢຸດຢັ້ງ. ພຣະອົງບໍ່ເຄີຍລົ້ມເຫຼວ ຫຼື ພຣະອົງກໍບໍ່ເຄີຍຢຸດປະຕິບັດພາລະກິດຂອງພຣະອົງນັບຕັ້ງແຕ່ທີ່ໂລກຖືກສ້າງຂຶ້ນ. ຫຼັງຈາກທີ່ຊາຕານໄດ້ເຮັດໃຫ້ມະນຸດເສື່ອມຊາມ, ພຣະອົງກໍໄດ້ສືບຕໍ່ປະຕິບັດພາລະກິດທ່າມກາງພວກເຂົາເພື່ອເອົາຊະນະຊາຕານ, ສັດຕູທີ່ເປັນຕົ້ນກຳເນີດແຫ່ງຄວາມເສື່ອມຊາມຂອງພວກເຂົາ. ການຕໍ່ສູ້ນີ້ໄດ້ລຸກລາມຕັ້ງແຕ່ຕອນເລີ່ມຕົ້ນ ແລະ ຈະສືບຕໍ່ຈົນເຖິງຕອນສິ້ນສຸດຂອງໂລກ. ໃນການປະຕິບັດພາລະກິດທັງໝົດນີ້, ພຣະເຈົ້າເຢໂຮວາບໍ່ພຽງແຕ່ໄດ້ເຮັດໃຫ້ມະນຸດຜູ້ທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ ໄດ້ຮັບການລອດພົ້ນທີ່ຍິ່ງໃຫຍ່ຂອງພຣະອົງ, ແຕ່ຍັງໄດ້ເຮັດໃຫ້ພວກເຂົາເຫັນສະຕິປັນຍາ, ລິດທານຸພາບສູງສຸດ ແລະ ສິດອຳນາດຂອງພຣະອົງອີກດ້ວຍ. ຍິ່ງໄປກວ່ານັ້ນ, ໃນທີ່ສຸດ, ພຣະອົງຈະເຮັດໃຫ້ພວກເຂົາໄດ້ເຫັນອຸປະນິໄສອັນຊອບທຳຂອງພຣະອົງ ໂດຍລົງໂທດຄົນຊົ່ວຮ້າຍ ແລະ ໃຫ້ລາງວັນຄົນດີ. ພຣະອົງໄດ້ຕໍ່ສູ້ກັບຊາຕານຈົນຮອດທຸກມື້ນີ້ ແລະ ບໍ່ເຄີຍເສຍໄຊຈັກເທື່ອ. ນີ້ກໍເພາະວ່າພຣະອົງເປັນພຣະເຈົ້າທີ່ມີສະຕິປັນຍາ ແລະ ພຣະອົງໃຊ້ສະຕິປັນຍາຂອງພຣະອົງໂດຍອີງຕາມກົນອຸບາຍຂອງຊາຕານ. ດ້ວຍເຫດນີ້, ພຣະເຈົ້າບໍ່ພຽງແຕ່ເຮັດໃຫ້ທຸກສິ່ງທຸກຢ່າງຢູ່ໃນສະຫວັນຕ້ອງຍອມຕໍ່ສິດອຳນາດຂອງພຣະອົງ, ແຕ່ພຣະອົງຍັງໄດ້ເຮັດໃຫ້ທຸກສິ່ງທຸກຢ່າງເທິງແຜ່ນດິນໂລກນອນຢູ່ໃຕ້ພຣະບາດຂອງພຣະອົງ ແລະ ບໍ່ແມ່ນແຕ່ສໍ່ານັ້ນ, ພຣະອົງຍັງເຮັດໃຫ້ຄົນຊົ່ວຮ້າຍທີ່ບຸກລຸກ ແລະ ຂົ່ມເຫັງມະນຸດຊາດຕົກຢູ່ພາຍໃຕ້ການຂ້ຽນຕີຂອງພຣະອົງ. ຜົນໄດ້ຮັບທັງໝົດຂອງ

ພາລະກິດນີ້ເກີດຂຶ້ນຍ້ອນສະຕິປັນຍາຂອງພຣະອົງ. ພຣະອົງບໍ່ເຄີຍເປີດເຜີຍສະຕິປັນຍາຂອງພຣະອົງກ່ອນທີ່ຈະມີມະນຸດຊາດ ເພາະວ່າພຣະອົງບໍ່ມີສັດຕູຢູ່ເທິງສະຫວັນ, ຢູ່ເທິງແຜ່ນດິນໂລກ ຫຼື ຢູ່ທົ່ວຈັກກະວານທັງປວງ ແລະ ບໍ່ມີກອງກຳລັງອັນມືດມົວທີ່ບຸກລຸກສິ່ງຕ່າງໆທ່າມກາງທຳມະຊາດ. ຫຼັງຈາກທີ່ອັກຄະເທວະດາໄດ້ທໍລະຍົດພຣະອົງ, ພຣະອົງໄດ້ສ້າງມະນຸດຊາດຢູ່ເທິງແຜ່ນດິນໂລກ ແລະ ມັນເປັນຍ້ອນມະນຸດຊາດ ພຣະອົງຈຶ່ງໄດ້ເລີ່ມສົງຄາມພັນປີຂອງພຣະອົງກັບຊາຕານ ແລະ ກັບອັກຄະເທວະດາເຊິ່ງເປັນສົງຄາມທີ່ເພີ່ມທະວີຄວາມຮຸນແຮງຂຶ້ນໃນທຸກຂັ້ນຕອນທີ່ຕໍ່ມາ. ລິດທານຸພາບສູງສຸດ ແລະ ສະຕິປັນຍາຂອງພຣະອົງແມ່ນມີຢູ່ໃນແຕ່ລະຂັ້ນຕອນເຫຼົ່ານີ້. ພຽງແຕ່ເມື່ອນັ້ນ ທຸກສິ່ງທຸກຢ່າງທີ່ຢູ່ໃນສະຫວັນ ແລະ ແຜ່ນດິນໂລກຈຶ່ງສາມາດເປັນພະຍານເຖິງສະຕິປັນຍາຂອງພຣະເຈົ້າ, ລິດທານຸພາບສູງສຸດ ແລະ ໂດຍສະເພາະແມ່ນຄວາມເປັນຈິງຂອງພຣະເຈົ້າ. ພຣະອົງຍັງດຳເນີນພາລະກິດຂອງພຣະອົງໃນລັກສະນະທີ່ເປັນຈິງນີ້ຈົນເຖິງປັດຈຸບັນ; ນອກຈາກນັ້ນ, ໃນຂະນະທີ່ພຣະອົງດຳເນີນພາລະກິດຂອງພຣະອົງ, ພຣະອົງຍັງໄດ້ສະແດງໃຫ້ເຫັນເຖິງສະຕິປັນຍາ ແລະ ລິດທານຸພາບສູງສຸດຂອງພຣະອົງ. ພຣະອົງອະນຸຍາດໃຫ້ພວກເຈົ້າເຫັນຄວາມຈິງພາຍໃນແຕ່ລະຂັ້ນຕອນຂອງພາລະກິດ, ເຫັນເຖິງການອະທິບາຍກ່ຽວກັບລິດທານຸພາບຂອງພຣະເຈົ້າແທ້ໆ ແລະ ຍິ່ງໄປກວ່ານັ້ນກໍເຫັນເຖິງການອະທິບາຍຢ່າງເດັດຂາດຂອງຄວາມເປັນຈິງຂອງພຣະເຈົ້າ.

ກ່ຽວກັບການທໍລະຍົດຂອງຄົນຢູດາຕໍ່ພຣະເຢຊູ, ບາງຄົນຄິດວ່າ: ສິ່ງນີ້ບໍ່ໄດ້ຖືກກຳນົດໄວ້ກ່ອນທີ່ຈະມີການສ້າງໂລກບໍ? ຄວາມຈິງແລ້ວ, ພຣະວິນຍານບໍລິສຸດໄດ້ວາງແຜນນີ້ໄວ້ອີງຕາມຄວາມເປັນຈິງໃນເວລານັ້ນ. ມັນບັງເອີນວ່າ ໄດ້ມີຄົນຜູ້ໜຶ່ງທີ່ຊື່ວ່າ ຢູດາທີ່ພະຍາຍາມຍັກຍອກເງິນຢູ່ຕະຫຼອດ. ດັ່ງນັ້ນ, ບຸກຄົນດັ່ງກ່າວຈຶ່ງໄດ້ຖືກເລືອກໃຫ້ຫຼິ້ນບົດບາດນີ້ ແລະ ເປັນຜູ້ຮັບໃຊ້ໃນທາງນີ້. ນີ້ແມ່ນຕົວຢ່າງທີ່ແທ້ຈິງຂອງການນຳໃຊ້ຊັບພະຍາກອນພາຍໃນ. ທຳອິດພຣະເຢຊູບໍ່ຮູ້ເລື່ອງນີ້; ພຣະອົງພຽງແຕ່ຮູ້ກ່ຽວກັບມັນຫຼັງຈາກທີ່ຢູດາຖືກເປີດເຜີຍ. ຖ້າຄົນອື່ນສາມາດຫຼິ້ນບົດບາດນີ້ໄດ້, ຄົນນັ້ນກໍອາດຈະໄດ້ເຮັດບົດບາດນີ້ແທນຢູດາ. ສິ່ງທີ່ຖືກກຳນົດໄວ້ນັ້ນ ໃນຄວາມເປັນຈິງແລ້ວ ແມ່ນສິ່ງທີ່ພຣະວິນຍານບໍລິສຸດໄດ້ເຮັດໃນເວລານັ້ນ. ພາລະກິດຂອງພຣະວິນຍານບໍລິສຸດແມ່ນຖືກປະຕິບັດແບບທຳມະຊາດສະເໝີ; ພຣະອົງສາມາດວາງແຜນພາລະກິດຂອງພຣະອົງໃນເວລາໃດກໍໄດ້ ແລະ ດຳເນີນແຜນການນັ້ນໃນເວລາໃດກໍໄດ້. ເປັນຫຍັງເຮົາຈຶ່ງເວົ້າຢູ່ຕະຫຼອດວ່າ ພາລະກິດຂອງພຣະວິນຍານບໍລິສຸດຄືຄວາມເປັນຈິງ, ໃໝ່ສະເໝີ, ບໍ່ເຄີຍເກົ່າ ແລະ ສົດໃສທີ່ສຸດຕະຫຼອດ? ພາລະກິດຂອງພຣະອົງບໍ່ໄດ້ຖືກວາງແຜນໄວ້ໃນເວລາທີ່ໂລກຖືກສ້າງຂຶ້ນ; ນັ້ນບໍ່ແມ່ນສິ່ງທີ່ເກີດຂຶ້ນເລີຍ! ທຸກຂັ້ນຕອນຂອງພາລະກິດແມ່ນເຮັດເພື່ອບັນລຸຜົນທີ່ຖືກຕ້ອງສຳລັບເວລານັ້ນ ແລະ ຂັ້ນຕອນຕ່າງໆກໍບໍ່ແຊກແຊງກັນ ແລະ ກັນ. ມີຫຼາຍຄັ້ງທີ່ແຜນການທີ່ຢູ່ໃນຫົວໃຈຂອງເຈົ້າບໍ່ສາມາດທຽບເທົ່າກັບພາລະກິດຫຼ້າສຸດຂອງພຣະວິນຍານບໍລິສຸດ. ພາລະກິດຂອງພຣະອົງບໍ່ງ່າຍດາຍຄືກັບທີ່ມະນຸດຄິດ ແລະ ມັນກໍບໍ່ຊັບຊ້ອນເທົ່າກັບທີ່ມະນຸດຈິນຕະນາການ; ມັນປະກອບດ້ວຍການສະໜອງຜູ້ຄົນໃນເວລາ ແລະ ສະຖານທີ່ໃດກໍໄດ້ຕາມຄວາມຕ້ອງການຂອງພວກເຂົາໃນປັດຈຸບັນ. ບໍ່ມີໃຜທີ່ຈະມີຄວາມຊັດເຈນກ່ຽວກັບແກ່ນແທ້

ຂອງມະນຸດຄືພຣະອົງ ແລະ ຍ້ອນເຫດຜົນນີ້ຈຶ່ງບໍ່ມີສິ່ງໃດສາມາດມີຄວາມແທດເໝາະກັບຄວາມຕ້ອງການທີ່ແທ້ຈິງຂອງຜູ້ຄົນຄືກັບພາລະກິດຂອງພຣະອົງ. ເພາະສະນັ້ນ, ຈາກທັດສະນະຂອງມະນຸດ, ພາລະກິດຂອງພຣະອົງຈຶ່ງເບິ່ງຄືກັບວ່າໄດ້ມີການວາງແຜນໄວ້ເປັນເວລາຫຼາຍພັນປີມາແລ້ວ. ໃນຂະນະທີ່ພຣະອົງປະຕິບັດພາລະກິດທ່າມກາງພວກເຈົ້າໃນປັດຈຸບັນ, ໃນຂະນະທີ່ກຳລັງປະຕິບັດ ແລະ ກ່າວ ແລະ ເຝົ້າເບິ່ງສະພາບທີ່ພວກເຈົ້າເປັນ, ພຣະອົງກໍຈະມີພຣະທຳທີ່ເໝາະສົມເພື່ອກ່າວຕໍ່ທຸກສະພາບການອີງຕາມຄວາມຕ້ອງການຂອງພວກເຈົ້າ. ຍົກຕົວຢ່າງຂັ້ນຕອນທຳອິດຂອງພາລະກິດຂອງພຣະອົງ ເຊັ່ນ: ເວລາຂອງການຂ້ຽນຕີ. ຫຼັງຈາກນັ້ນ ພຣະເຈົ້າໄດ້ດຳເນີນພາລະກິດຂອງພຣະອົງອີງຕາມສິ່ງທີ່ຜູ້ຄົນໄດ້ສະແດງອອກມາ, ການຕໍ່ຕ້ານຂອງພວກເຂົາ, ສະພາບທາງບວກ ແລະ ສະພາບທາງລົບທີ່ເກີດຂຶ້ນຈາກພວກເຂົາ, ເຊັ່ນດຽວກັນກັບຂີດຈຳກັດຕໍ່າສຸດ ທີ່ຜູ້ຄົນຈະລົ້ມລົງ ເມື່ອສະພາບທາງລົບມາເຖິງຈຸດໃດໜຶ່ງ ແລະ ພຣະອົງຊົງຍຶດເອົາສິ່ງເຫຼົ່ານີ້ເພື່ອບັນລຸຜົນສຳເລັດທີ່ດີກວ່າຈາກພາລະກິດຂອງພຣະອົງ. ໝາຍຄວາມວ່າ ພຣະອົງປະຕິບັດພາລະກິດຂອງພຣະອົງອີງຕາມສະພາບການໃນປັດຈຸບັນຂອງພວກເຂົາ; ພຣະອົງດຳເນີນທຸກຂັ້ນຕອນຂອງພາລະກິດຂອງພຣະອົງອີງຕາມສະພາບການຕົວຈິງຂອງຜູ້ຄົນ. ການຊົງສ້າງທັງໝົດແມ່ນຢູ່ໃນກຳມືຂອງພຣະອົງ; ແລ້ວພຣະອົງຈະບໍ່ສາມາດຮູ້ຈັກສິ່ງເຫຼົ່ານັ້ນບໍ? ພຣະເຈົ້າດຳເນີນຂັ້ນຕອນຕໍ່ໄປຂອງພາລະກິດທີ່ຄວນເຮັດ ຢູ່ໃນເວລາ ແລະ ສະຖານທີ່ໃດກໍໄດ້ອີງຕາມສະພາບການຂອງຜູ້ຄົນ. ບໍ່ມີທາງທີ່ພາລະກິດດັ່ງກ່າວນີ້ໄດ້ຖືກວາງແຜນໄວ້ກ່ອນລ່ວງໜ້າເປັນເວລາຫຼາຍພັນປີ; ນັ້ນແມ່ນຄວາມຄິດຂອງມະນຸດ! ພຣະອົງປະຕິບັດພາລະກິດໃນຂະນະທີ່ພຣະອົງສັງເກດເບິ່ງຜົນຂອງພາລະກິດຂອງພຣະອົງ ແລະ ພາລະກິດຂອງພຣະອົງແມ່ນມີຄວາມເລິກເຊິ່ງ ແລະ ພັດທະນາຂຶ້ນຢ່າງຕໍ່ເນື່ອງ; ແຕ່ລະຄັ້ງ ຫຼັງຈາກໄດ້ສັງເກດເບິ່ງຜົນໄດ້ຮັບຈາກພາລະກິດຂອງພຣະອົງ, ພຣະອົງກໍດຳເນີນຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງ. ພຣະອົງໃຊ້ຫຼາຍສິ່ງຫຼາຍຢ່າງເພື່ອການປ່ຽນແປງເທື່ອລະໜ້ອຍ ແລະ ເພື່ອເຮັດໃຫ້ຜູ້ຄົນສາມາດແນມເຫັນພາລະກິດໃໝ່ຂອງພຣະອົງຕາມການເວລາ. ການເຮັດພາລະກິດແບບນີ້ສາມາດສະໜອງໃຫ້ແກ່ຄວາມຕ້ອງການຂອງຜູ້ຄົນ ເພາະວ່າພຣະເຈົ້າຮູ້ຈັກຜູ້ຄົນດີ. ນີ້ແມ່ນວິທີທີ່ພຣະອົງດຳເນີນພາລະກິດຂອງພຣະອົງຈາກສະຫວັນ. ໃນທຳນອງດຽວກັນ, ພຣະເຈົ້າທີ່ບັງເກີດເປັນມະນຸດກໍໄດ້ກະທຳພາລະກິດຂອງພຣະອົງດ້ວຍວິທີນີ້ເຊັ່ນກັນ ໂດຍຈັດແຈງ ແລະ ປະຕິບັດພາລະກິດທ່າມກາງມະນຸດອີງຕາມສະພາບການຕົວຈິງ. ບໍ່ໄດ້ມີການຈັດແຈງພາລະກິດຂອງພຣະອົງກ່ອນການສ້າງໂລກ ແລະ ບໍ່ມີການວາງແຜນໄວ້ລ່ວງໜ້າຢ່າງລະອຽດ. ຫຼັງຈາກໂລກນີ້ຖືກສ້າງຂຶ້ນໄດ້ສອງພັນປີ, ພຣະເຢໂຮວາເຫັນວ່າ ມະນຸດໄດ້ເສື່ອມຊາມຫຼາຍຈົນພຣະອົງໄດ້ໃຊ້ປາກຂອງຜູ້ປະກາດພຣະທຳເອຊາຢາເພື່ອທຳນາຍວ່າ ພາຍຫຼັງຍຸກແຫ່ງພຣະບັນຍັດໄດ້ສິ້ນສຸດລົງ, ພຣະເຢໂຮວາຈະດຳເນີນພາລະກິດເພື່ອໄຖ່ບາບໃຫ້ກັບມະນຸດຊາດໃນຍຸກຂອງພຣະຄຸນ. ນີ້ແມ່ນແຜນການຂອງພຣະເຢໂຮວາ, ແນ່ນອນ ແຜນການນີ້ແມ່ນໄດ້ສ້າງຂຶ້ນອີງຕາມສະພາບການທີ່ພຣະອົງໄດ້ສັງເກດເຫັນໃນເວລານັ້ນເຊັ່ນກັນ; ພຣະອົງບໍ່ໄດ້ຄົ້ນຄິດແຜນການນີ້ທັນທີຫຼັງຈາກໄດ້ສ້າງອາດາມຢ່າງແນ່ນອນ. ເອຊາຢາພຽງແຕ່ທຳນາຍໄວ້, ແຕ່ພຣະເຢໂຮວາບໍ່ໄດ້ກະກຽມພາລະກິດນີ້ໄວ້ໃນຍຸກແຫ່ງ

ພຣະບັນຍັດ; ໃນທາງກົງກັນຂ້າມ, ພຣະອົງເລີ່ມດຳເນີນພາລະກິດນີ້ ໃນຕອນເລີ່ມຕົ້ນຂອງຍຸກແຫ່ງພຣະຄຸນ, ເມື່ອທູດສະຫວັນໄດ້ປາກົດຢູ່ໃນຄວາມຝັນຂອງໂຢເຊັບເພື່ອໃຫ້ແສງສະຫວ່າງແກ່ລາວດ້ວຍຂ່າວປະເສີດວ່າ ພຣະເຈົ້າຈະກາຍເປັນເນື້ອໜັງ ແລະ ພຽງເມື່ອນັ້ນ ພາລະກິດຂອງການບັງເກີດເປັນມະນຸດຂອງພຣະອົງຈຶ່ງໄດ້ເລີ່ມຕົ້ນຂຶ້ນ. ພຣະເຈົ້າບໍ່ໄດ້ກະກຽມພາລະກິດແຫ່ງການບັງເກີດເປັນມະນຸດຂອງພຣະອົງ ຫຼັງຈາກການສ້າງໂລກ ຕາມທີ່ມະນຸດໄດ້ຈິນຕະນາການໄວ້; ມັນພຽງໄດ້ຖືກຕັດສິນອີງຕາມລະດັບການພັດທະນາຂອງມະນຸດ ແລະ ສະຖານະຂອງສົງຄາມຂອງພຣະອົງກັບຊາຕານ.

ເມື່ອພຣະເຈົ້າບັງເກີດເປັນເນື້ອໜັງ, ພຣະວິນຍານຂອງພຣະອົງແມ່ນລົງມາສູ່ມະນຸດ; ເວົ້າອີກຢ່າງກໍຄື ພຣະວິນຍານຂອງພຣະເຈົ້າໄດ້ສວມໃສ່ເຄື່ອງນຸ່ງດ້ວຍເນື້ອໜັງ. ພຣະອົງສະເດັດມາເພື່ອເຮັດພາລະກິດຂອງພຣະອົງເທິງແຜ່ນດິນໂລກ ແລະ ບໍ່ໄດ້ນຳຂັ້ນຕອນທີ່ຈຳກັດໃດໜຶ່ງມາກັບພຣະອົງ, ພາລະກິດຂອງພຣະອົງບໍ່ມີຂໍ້ຈຳກັດຢ່າງແນ່ນອນ. ພາລະກິດທີ່ພຣະວິນຍານບໍລິສຸດເຮັດໃນເນື້ອໜັງແມ່ນຖືກກຳນົດໂດຍຜົນຈາກພາລະກິດຂອງພຣະອົງເຊັ່ນກັນ ແລະ ພຣະອົງຊົງນຳໃຊ້ສິ່ງດັ່ງກ່າວນີ້ເພື່ອກຳນົດໄລຍະເວລາໃນການເຮັດພາລະກິດຂອງພຣະອົງໃນຂະນະທີ່ຢູ່ໃນເນື້ອໜັງ. ພຣະວິນຍານບໍລິສຸດເປີດເຜີຍພາລະກິດໃນແຕ່ລະຂັ້ນຕອນຂອງພຣະອົງໂດຍກົງ, ພິຈາລະນາພາລະກິດຂອງພຣະອົງໃນຂະນະທີ່ພຣະອົງປະຕິບັດມັນ; ພາລະກິດນີ້ບໍ່ແມ່ນສິ່ງເໜືອທຳມະຊາດ ທີ່ນອກເໜືອຂອບເຂດຈິນຕະນາການຂອງມະນຸດ. ນີ້ແມ່ນຄ້າຍຄືກັບພາລະກິດຂອງພຣະເຢໂຮວາໃນການສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ສັບພະສິ່ງທັງປວງ; ພຣະອົງໄດ້ວາງແຜນ ແລະ ເຮັດພາລະກິດໄປພ້ອມໆກັນ. ພຣະອົງໄດ້ແຍກແສງສະຫວ່າງອອກຈາກຄວາມມືດ ແລະ ຕອນເຊົ້າ ແລະ ຕອນຄ່ຳກໍໄດ້ເກີດຂຶ້ນ ເຊິ່ງສິ່ງນີ້ໃຊ້ເວລາພຽງໜຶ່ງມື້. ໃນມື້ທີສອງ ພຣະອົງໄດ້ສ້າງຟ້າ ເຊິ່ງໃຊ້ເວລາພຽງໜຶ່ງມື້ເຊັ່ນກັນ; ຫຼັງຈາກນັ້ນ ພຣະອົງກໍສ້າງແຜ່ນດິນໂລກ, ທະເລ ແລະ ສິ່ງມີຊີວິດທີ່ອາໄສຢູ່ໃນນັ້ນ ເຊິ່ງໃຊ້ເວລາພຽງໜຶ່ງມື້ເຊັ່ນກັນ. ນີ້ສືບຕໍ່ຈົນເຖິງມື້ທີຫົກເມື່ອພຣະເຈົ້າສ້າງມະນຸດ ແລະ ປ່ອຍໃຫ້ມະນຸດຄຸ້ມຄອງທຸກສິ່ງເທິງແຜ່ນດິນໂລກ. ຫຼັງຈາກນັ້ນ, ໃນມື້ທີເຈັດ ເມື່ອພຣະອົງໄດ້ສ້າງທຸກສິ່ງຈົນສຳເລັດ, ພຣະອົງກໍພັກຜ່ອນ. ພຣະເຈົ້າໃຫ້ພອນແກ່ມື້ທີເຈັດ ແລະ ກຳນົດໃຫ້ມັນເປັນມື້ສັກສິດ. ພຣະອົງພຽງຕັດສິນໃຈສ້າງມື້ສັກສິດນີ້ຫຼັງຈາກທີ່ພຣະອົງໄດ້ສ້າງທຸກສິ່ງທຸກຢ່າງ ແລະ ບໍ່ແມ່ນກ່ອນສ້າງພວກມັນ. ພາລະກິດນີ້ແມ່ນໄດ້ດຳເນີນໄປພ້ອມໆກັນເຊັ່ນກັນ; ກ່ອນທີ່ຈະສ້າງທຸກສິ່ງ, ພຣະອົງບໍ່ໄດ້ຕັດສິນໃຈສ້າງໂລກພາຍໃນຫົກມື້ ແລະ ພັກຜ່ອນໃນມື້ທີເຈັດ; ນັ້ນບໍ່ສອດຄ່ອງກັບຄວາມຈິງເລີຍ. ພຣະອົງບໍ່ໄດ້ກ່າວໃນສິ່ງນີ້ ແລະ ພຣະອົງບໍ່ໄດ້ວາງແຜນມັນ. ບໍ່ມີທາງທີ່ພຣະອົງໄດ້ເວົ້າວ່າ ການສ້າງສັບພະສິ່ງທັງປວງຈະສຳເລັດໃນມື້ທີຫົກ ແລະ ພຣະອົງຈະພັກຜ່ອນໃນມື້ທີເຈັດ; ກົງກັນຂ້າມ, ພຣະອົງສ້າງໃນສິ່ງທີ່ພຣະອົງເຫັນວ່າດີໃນເວລານັ້ນ. ເມື່ອພຣະອົງໄດ້ສ້າງທຸກສິ່ງທຸກຢ່າງສຳເລັດ, ມັນກໍແມ່ນມື້ທີຫົກແລ້ວ. ຖ້າຫາກວ່າພຣະອົງສ້າງທຸກສິ່ງທຸກຢ່າງສຳເລັດໃນມື້ທີຫ້າ, ພຣະອົງກໍຈະກຳນົດໃຫ້ມື້ທີຫົກເປັນມື້ສັກສິດ; ແຕ່ວ່າພຣະອົງສ້າງທຸກສິ່ງທຸກຢ່າງໃນມື້ທີຫົກ ແລະ ດ້ວຍເຫດນັ້ນ ມື້ທີເຈັດຈຶ່ງໄດ້ກາຍເປັນມື້ສັກສິດ ເຊິ່ງຖືກນຳໃຊ້ກັນຈົນຮອດປັດຈຸບັນ. ເພາະສະນັ້ນ, ພາລະກິດຂອງພຣະອົງໃນປັດຈຸບັນແມ່ນດຳເນີນໃນ

ຮູບແບບດຽວກັນນີ້. ພຣະອົງກ່າວ ແລະ ສະໜອງໃຫ້ແກ່ຄວາມຕ້ອງການຂອງພວກເຈົ້າອີງຕາມເງື່ອນໄຂຂອງພວກເຈົ້າ. ໝາຍຄວາມວ່າ ພຣະວິນຍານເວົ້າ ແລະ ເຮັດພາລະກິດຕາມເງື່ອນໄຂຂອງຜູ້ຄົນ; ພຣະອົງສັງເກດເບິ່ງທຸກຢ່າງ ແລະ ເຮັດພາລະກິດ ໃນເວລາ ແລະ ສະຖານທີ່ໃດກໍໄດ້. ສິ່ງທີ່ເຮົາເຮັດ, ກ່າວ, ມອບ ແລະ ປະທານໃຫ້ພວກເຈົ້າແມ່ນອີງຕາມສິ່ງທີ່ພວກເຈົ້າຕ້ອງການຢ່າງບໍ່ມີຂໍ້ຍົກເວັ້ນ. ດັ່ງນັ້ນ, ພາລະກິດຂອງເຮົາແມ່ນບໍ່ໄດ້ແຍກອອກຈາກຄວາມເປັນຈິງ; ທັງໝົດແມ່ນຄວາມຈິງເພາະພວກເຈົ້າທຸກຄົນຮູ້ວ່າ "ພຣະວິນຍານຂອງພຣະເຈົ້າຄອຍເຝົ້າເບິ່ງທຸກຄົນ". ຖ້າຫາກວ່າ ສິ່ງນີ້ໄດ້ມີການຕັດສິນມາກ່ອນ, ແລ້ວມັນຈະບໍ່ຕາຍໂຕເກີນໄປບໍ? ເຈົ້າຄິດວ່າ ພຣະເຈົ້າສ້າງແຜນການເປັນເວລາຫົກພັນປີ ແລ້ວກຳນົດໄວ້ລ່ວງໜ້າໃຫ້ມະນຸດຕໍ່ຕ້ານ, ຂັດຂືນ, ຄົດລ້ຽວ, ຫຼອກລວງ, ເຮັດໃຫ້ເນື້ອໜັງເສື່ອມຊາມ, ມີອຸປະນິໄສຊາຕານ, ມີສາຍຕາທີ່ເຕັມໄປດ້ວຍຕັນຫາ ແລະ ເຮັດຕາມໃຈຕົນເອງບໍ? ພຣະເຈົ້າບໍ່ໄດ້ກຳນົດສິ່ງດັ່ງກ່າວນີ້ໄວ້ລ່ວງໜ້າ ແຕ່ທຸກສິ່ງເຫຼົ່ານີ້ແມ່ນເປັນຍ້ອນຄວາມເສື່ອມຊາມຂອງຊາຕານ. ບາງຄົນອາດຈະເວົ້າວ່າ: "ຊາຕານບໍ່ຢູ່ໃນການຄວບຄຸມຂອງພຣະເຈົ້າບໍ? ພຣະເຈົ້າໄດ້ກຳນົດລ່ວງໜ້າໃຫ້ຊາຕານເສື່ອມຊາມມະນຸດໃນລັກສະນະດັ່ງກ່າວນີ້ ແລະ ຫຼັງຈາກນັ້ນ ພຣະອົງກໍດຳເນີນພາລະກິດຂອງພຣະອົງທ່າມກາງມະນຸດ". ພຣະເຈົ້າກຳນົດລ່ວງໜ້າເພື່ອໃຫ້ຊາຕານເຮັດໃຫ້ມວນມະນຸດເສື່ອມຊາມແທ້ບໍ? ພຣະອົງພຽງແຕ່ຕ້ອງການຢາກໃຫ້ມະນຸດດຳລົງຊີວິດເປັນປົກກະຕິ; ແລ້ວເຫດໃດພຣະອົງຈຶ່ງຈະແຊກແຊງຊີວິດຂອງມະນຸດ? ຖ້າເປັນດັ່ງນັ້ນ, ການເອົາຊະນະຊາຕານ ແລະ ການຊ່ວຍມະນຸດໃຫ້ລອດພົ້ນກໍຈະເປັນພຽງຄວາມພະຍາຍາມທີ່ໄຮ້ປະໂຫຍດ ບໍ່ແມ່ນບໍ? ການຕໍ່ຕ້ານຂອງມະນຸດຈະຖືກກຳນົດໄວ້ລ່ວງໜ້າໄດ້ແນວໃດ? ມັນເປັນສິ່ງທີ່ເກີດຂຶ້ນຍ້ອນການແຊກແຊງຂອງຊາຕານ; ແລ້ວພຣະເຈົ້າຈະກຳນົດສິ່ງນີ້ໄວ້ລ່ວງໜ້າໄດ້ແນວໃດ? ຊາຕານຜູ້ເຊິ່ງຢູ່ພາຍໃຕ້ການຄວບຄຸມຂອງພຣະເຈົ້າທີ່ພວກເຈົ້າເຂົ້າໃຈ ແລະ ຊາຕານທີ່ຢູ່ພາຍໃຕ້ການຄວບຄຸມຂອງພຣະເຈົ້າທີ່ເຮົາກ່າວເຖິງແມ່ນແຕກຕ່າງກັນຫຼາຍ. ຕາມຄຳເວົ້າຂອງພວກເຈົ້າທີ່ວ່າ: "ພຣະເຈົ້າມີລິດອຳນາດສູງສຸດ ແລະ ຊາຕານແມ່ນຢູ່ໃນກຳມືຂອງພຣະອົງ", ສະນັ້ນຊາຕານຈະບໍ່ທໍລະຍົດພຣະອົງຈັກເທື່ອ. ເຈົ້າບໍ່ໄດ້ເວົ້າວ່າພຣະເຈົ້າເປັນຜູ້ມີລິດອຳນາດບໍ? ຄວາມຮູ້ຂອງພວກເຈົ້າແມ່ນຕື້ນຫຼາຍ ແລະ ຢູ່ນອກຂອບເຂດຂອງຄວາມເປັນຈິງ; ມະນຸດບໍ່ສາມາດເຂົ້າໃຈຄວາມຄິດຂອງພຣະເຈົ້າໄດ້ ແລະ ມະນຸດບໍ່ສາມາດເຂົ້າໃຈສະຕິປັນຍາຂອງພຣະເຈົ້າໄດ້! ພຣະເຈົ້າມີລິດອຳນາດສູງສຸດ; ນີ້ບໍ່ແມ່ນສິ່ງທີ່ຜິດເລີຍ. ເທວະທູດໄດ້ທໍລະຍົດພຣະເຈົ້າ ເພາະວ່າທຳອິດພຣະເຈົ້າໄດ້ມອບອຳນາດບາງສ່ວນໃຫ້ແກ່ພວກເຂົາ. ແນ່ນອນ ສິ່ງນີ້ແມ່ນເຫດການທີ່ບໍ່ໄດ້ຄາດເຖິງ, ເຊັ່ນດຽວກັນກັບເອວາໄດ້ຍອມຈຳນົນຕໍ່ການລໍ້ລວງຂອງງູ. ເຖິງຢ່າງໃດກໍຕາມ, ບໍ່ວ່າຊາຕານຈະດຳເນີນການທໍລະຍົດຂອງມັນ ແຕ່ມັນບໍ່ໄດ້ມີລິດອຳນາດສູງສຸດຄືດັ່ງພຣະເຈົ້າ. ດັ່ງທີ່ພວກເຈົ້າໄດ້ກ່າວມາ, ຊາຕານມີອຳນາດພຽງເລັກນ້ອຍ; ບໍ່ວ່າມັນຈະເຮັດຫຍັງກໍຕາມ, ອຳນາດຂອງພຣະເຈົ້າກໍຈະເອົາຊະນະມັນ. ນີ້ແມ່ນຄວາມໝາຍແທ້ຈິງທີ່ຢູ່ເບື້ອງຫຼັງຂອງຄຳເວົ້າທີ່ວ່າ: "ພຣະເຈົ້າແມ່ນມີລິດອຳນາດສູງສຸດ ແລະ ຊາຕານແມ່ນຢູ່ໃນກຳມືຂອງພຣະອົງ". ດັ່ງນັ້ນ, ສົງຄາມຂອງພຣະອົງກັບຊາຕານຕ້ອງໄດ້ດຳເນີນໄປເທື່ອລະຂັ້ນຕອນ; ຍິ່ງໄປກວ່ານັ້ນ, ພຣະອົງໄດ້ວາງແຜນ

ພາລະກິດຂອງພຣະອົງໃນການຕອບໂຕ້ຕໍ່ກົນອຸບາຍຂອງຊາຕານ, ໝາຍຄວາມວ່າ ພຣະອົງນຳຄວາມລອດພົ້ນມາສູ່ມະນຸດຊາດ ແລະ ເປີດເຜີຍລິດທານຸພາບສູງສຸດ ແລະ ສະຕິປັນຍາຂອງພຣະອົງໃນລັກສະນະ ທີ່ເໝາະສົມກັບຍຸກ. ເຊັ່ນດຽວກັນ, ພາລະກິດໃນຍຸກສຸດທ້າຍແມ່ນບໍ່ໄດ້ຖືກກຳນົດລ່ວງໜ້າ ກ່ອນຍຸກແຫ່ງພຣະຄຸນ; ການກຳນົດລ່ວງໜ້າບໍ່ໄດ້ກຳນົດໃນລັກສະນະທີ່ເປັນລະບຽບ ເຊັ່ນ: ຢ່າງທຳອິດ, ເຮັດໃຫ້ອຸປະນິໄສພາຍນອກຂອງມະນຸດປ່ຽນແປງ; ຢ່າງທີສອງ, ເຮັດໃຫ້ມະນຸດຍອມຮັບການຂ້ຽນຕີ ແລະ ການທົດລອງ; ຢ່າງທີສາມ, ເຮັດໃຫ້ມະນຸດປະສົບກັບການທົດລອງແຫ່ງຄວາມຕາຍ; ຢ່າງທີສີ່, ເຮັດໃຫ້ມະນຸດປະສົບກັບເວລາແຫ່ງຄວາມຮັກພຣະເຈົ້າ ແລະ ສະແດງເຖິງຄວາມປະນິທານຂອງຜູ້ທີ່ຖືກສ້າງ; ຢ່າງທີຫ້າ, ເຮັດໃຫ້ມະນຸດແນມເຫັນຄວາມປະສົງຂອງພຣະເຈົ້າ ແລະ ຮູ້ຈັກພຣະເຈົ້າທັງໝົດ ແລະ ສຸດທ້າຍ, ເຮັດໃຫ້ມະນຸດສົມບູນ. ພຣະອົງບໍ່ໄດ້ວາງແຜນສິ່ງທັງໝົດເຫຼົ່ານີ້ໃນຍຸກແຫ່ງພຣະຄຸນ; ກົງກັນຂ້າມ, ພຣະອົງໄດ້ເລີ່ມຕົ້ນວາງແຜນສິ່ງເຫຼົ່ານີ້ໃນຍຸກປັດຈຸບັນ. ຊາຕານກຳລັງເຮັດພາລະກິດ ແລະ ພຣະເຈົ້າກໍເຊັ່ນກັນ. ຊາຕານສະແດງອຸປະນິໄສທີ່ເສື່ອມຊາມຂອງມັນ ໃນຂະນະທີ່ພຣະເຈົ້າເວົ້າກົງໄປກົງມາ ແລະ ເປີດເຜີຍບາງສິ່ງທີ່ຈຳເປັນ. ນີ້ແມ່ນພາລະກິດທີ່ຖືກກະທຳໃນມື້ນີ້ ແລະ ມີຫຼັກການເຮັດວຽກດຽວກັນໃນການປະຕິບັດພາລະກິດ ເຊິ່ງໄດ້ຖືກນຳໃຊ້ມາແຕ່ດົນນານແລ້ວ ພາຍຫຼັງໄດ້ມີການສ້າງໂລກ.

ທຳອິດ ພຣະເຈົ້າໄດ້ສ້າງອາດາມ ແລະ ເອວາ ແລະ ພຣະອົງຍັງໄດ້ສ້າງງູ. ໃນບັນດາສັບພະສິ່ງທັງໝົດ, ງູມີພິດຫຼາຍທີ່ສຸດ; ຮ່າງກາຍຂອງມັນມີພິດ ເຊິ່ງຊາຕານໄດ້ໃຊ້ພິດນີ້ເພື່ອຜົນປະໂຫຍດ. ມັນແມ່ນງູທີ່ລໍ້ລວງໃຫ້ເອວາເຮັດບາບ. ແລ້ວອາດາມກໍໄດ້ເຮັດບາບຫຼັງຈາກທີ່ເອວາໄດ້ເຮັດ ແລະ ຫຼັງຈາກນັ້ນ ທັງສອງຄົນກໍສາມາດແຍກແຍະລະຫວ່າງຄວາມດີ ແລະ ຄວາມຊົ່ວ. ຖ້າພຣະເຢໂຮວາຮູ້ວ່າ ງູຈະລໍ້ລວງເອວາ ແລະ ເອວາຈະລໍ້ລວງອາດາມ ແລ້ວເປັນຫຍັງພຣະອົງຈຶ່ງຈັດພວກເຂົາທັງໝົດຢູ່ໃນສວນ? ຖ້າຫາກວ່າ ພຣະອົງສາມາດຄາດຄະເນສິ່ງເຫຼົ່ານີ້ລ່ວງໜ້າ ແລ້ວເປັນຫຍັງພຣະອົງຈຶ່ງສ້າງງູ ແລະ ວາງໃຫ້ມັນຢູ່ໃນສວນເອເດນ? ເປັນຫຍັງສວນຂອງເອເດນຈຶ່ງມີໝາກໄມ້ຂອງຕົ້ນໄມ້ແຫ່ງຄວາມຮູ້ລະຫວ່າງຄວາມດີ ແລະ ຄວາມຊົ່ວ? ພຣະອົງມີຈຸດປະສົງໃຫ້ພວກເຂົາກິນໝາກໄມ້ນັ້ນບໍ? ເມື່ອພຣະເຢໂຮວາສະເດັດມາ, ທັງອາດາມ ແລະ ເອວາບໍ່ກ້າທີ່ຈະຜະເຊີນໜ້າກັບພຣະອົງ ແລະ ໃນເວລານັ້ນເອງທີ່ພຣະເຢໂຮວາຮູ້ວ່າ ພວກເຂົາໄດ້ກິນໝາກໄມ້ຈາກຕົ້ນໄມ້ແຫ່ງຄວາມຮູ້ລະຫວ່າງຄວາມດີ ແລະ ຄວາມຊົ່ວ ແລະ ໄດ້ຕົກເປັນເຫຍື່ອຂອງຄວາມຫຼອກລວງຂອງງູໄປແລ້ວ. ສຸດທ້າຍ ພຣະອົງກໍໄດ້ສາບແຊ່ງງູ ແລະ ສາບແຊ່ງອາດາມ ແລະ ເອວາເຊັ່ນກັນ. ໃນເວລາທີ່ທັງສອງຄົນກິນໝາກໄມ້ຈາກຕົ້ນໄມ້ນັ້ນ ພຣະເຢໂຮວາບໍ່ໄດ້ຮູ້ວ່າ ພວກເຂົາທັງສອງໄດ້ກິນໝາກໄມ້ຈາກຕົ້ນໄມ້. ມະນຸດໄດ້ກາຍເປັນຄົນເສື່ອມຊາມຈົນຮອດຂັ້ນຊົ່ວຮ້າຍ ແລະ ເກີດມີຕັນຫາທາງເພດ, ເຖິງຂັ້ນທີ່ທຸກສິ່ງທີ່ພວກເຂົາມີຢູ່ໃນຫົວໃຈຂອງພວກເຂົາແມ່ນລ້ວນແລ້ວແຕ່ເປັນສິ່ງຊົ່ວຮ້າຍ ແລະ ຂາດຄວາມຊອບທຳ; ທຸກສິ່ງແມ່ນສິ່ງທີ່ສົກກະປົກ. ດັ່ງນັ້ນ, ພຣະເຢໂຮວາຈຶ່ງເສຍໃຈທີ່ໄດ້ສ້າງມະນຸດຊາດ. ຫຼັງຈາກນັ້ນພຣະອົງກໍໄດ້ປະຕິບັດພາລະກິດຂອງພຣະອົງ ເພື່ອທຳລາຍໂລກດ້ວຍນໍ້າຖ້ວມ ເຊິ່ງມີພຽງແຕ່ໂນອາ

ແລະ ລູກຊາຍຂອງລາວທີ່ມີຊີວິດລອດ. ຄວາມຈິງແລ້ວ ບາງສິ່ງບາງຢ່າງກໍບໍ່ໄດ້ກ້າວໜ້າ ແລະ ເໜືອທຳມະຊາດຕາມທີ່ຜູ້ຄົນອາດຈິນຕະນາການ. ບາງຄົນຖາມວ່າ: "ໃນເມື່ອພຣະເຈົ້າຮູ້ວ່າ ເທວະທູດຈະທໍລະຍົດຕໍ່ພຣະອົງ ແລ້ວເປັນຫຍັງພຣະອົງຈຶ່ງສ້າງມັນຂຶ້ນມາ?" ສິ່ງເຫຼົ່ານີ້ແມ່ນຄວາມຈິງ: ໃນສະໄໝທີ່ຍັງບໍ່ມີແຜ່ນດິນໂລກ, ເທວະທູດຄືທູດສະຫວັນທີ່ຍິ່ງໃຫຍ່. ມັນມີອຳນາດຄວບຄຸມທູດສະຫວັນໃນສະຫວັນທັງໝົດ; ນີ້ແມ່ນອຳນາດທີ່ພຣະເຈົ້າຊົງມອບໃຫ້ມັນ. ນອກຈາກພຣະເຈົ້າແລ້ວ, ມັນຄືຜູ້ຍິ່ງໃຫຍ່ທີ່ສຸດໃນບັນດາທູດສະຫວັນຂອງສະຫວັນ. ຕໍ່ມາເມື່ອພຣະເຈົ້າຊົງສ້າງມະນຸດ, ເທວະທູດຈຶ່ງດຳເນີນການທໍລະຍົດຕໍ່ພຣະເຈົ້າຢ່າງໃຫຍ່ຫຼວງເທິງແຜ່ນດິນໂລກ. ເຮົາເວົ້າວ່າ ມັນທໍລະຍົດຕໍ່ພຣະເຈົ້າເພາະວ່າມັນຕ້ອງການຄຸ້ມຄອງມະນຸດຊາດ ແລະ ຢູ່ເໜືອອຳນາດຂອງພຣະເຈົ້າ. ມັນເປັນເທວະທູດທີ່ລໍ້ລວງເອວາເຂົ້າສູ່ຄວາມບາບ; ມັນເຮັດແບບນັ້ນ ຍ້ອນມັນຕ້ອງການສ້າງອານາຈັກຂອງມັນເທິງແຜ່ນດິນໂລກ ແລະ ເຮັດໃຫ້ມະນຸດຊາດທໍລະຍົດຕໍ່ພຣະເຈົ້າ ແລະ ມາເຊື່ອຟັງມັນແທນ. ເທວະທູດເຫັນວ່າ ມີຫຼາຍສິ່ງທີ່ສາມາດເຊື່ອຟັງມັນ; ທູດສະຫວັນສາມາດເຊື່ອຟັງມັນ ແລະ ຜູ້ຄົນໃນແຜ່ນດິນໂລກກໍສາມາດເຊັ່ນກັນ. ຝູງນົກ, ສັດປ່າ, ຕົ້ນໄມ້, ປ່າດົງ, ພູເຂົາ, ແມ່ນໍ້າ ແລະ ສັບພະສິ່ງທັງໝົດເທິງແຜ່ນດິນໂລກແມ່ນຢູ່ພາຍໃຕ້ການດູແລຂອງມະນຸດ ນັ້ນກໍຄື ອາດາມ ແລະ ເອວາ, ແລ້ວອາດາມ ແລະເອວາກໍເຊື່ອຟັງມັນ. ສະນັ້ນ, ເທວະທູດຈຶ່ງປາດຖະໜາຢາກຢູ່ເໜືອອຳນາດຂອງພຣະເຈົ້າ ແລະທໍລະຍົດຕໍ່ພຣະອົງ. ຫຼັງຈາກນັ້ນ ມັນນຳພາທູດສະຫວັນທັງຫຼາຍກະບົດຕໍ່ພຣະເຈົ້າ ເຊິ່ງຕໍ່ມາກໍໄດ້ກາຍເປັນວິນຍານຊົ່ວຮ້າຍຕ່າງໆ. ການພັດທະນາຂອງມວນມະນຸດມາເຖິງທຸກວັນນີ້ບໍ່ແມ່ນເກີດຈາກຄວາມເສື່ອມຊາມຂອງເທວະທູດນັ້ນບໍ? ມວນມະນຸດເປັນດັ່ງທຸກມື້ນີ້ຍ້ອນເທວະທູດທໍລະຍົດຕໍ່ພຣະເຈົ້າ ແລະ ເຮັດໃຫ້ມະນຸດເສື່ອມຊາມ. ພາລະກິດແຕ່ລະຂັ້ນຕອນນີ້ ແມ່ນບໍ່ໄດ້ເປັນຮູບປະທຳ ແລະ ງ່າຍດາຍດັ່ງທີ່ຜູ້ຄົນຈິນຕະນາການ. ຊາຕານໄດ້ດຳເນີນການທໍລະຍົດຂອງມັນເພື່ອຜົນປະໂຫຍດໃດໜຶ່ງ, ແຕ່ຜູ້ຄົນບໍ່ສາມາດເຂົ້າໃຈເຖິງຂໍ້ເທັດຈິງນີ້. ເປັນຫຍັງພຣະເຈົ້າຈຶ່ງສ້າງສະຫວັນ ແລະ ແຜ່ນດິນໂລກ ແລະສັບພະສິ່ງທັງໝົດ, ແລ້ວຍັງສ້າງຊາຕານອີກ? ໃນເມື່ອ ພຣະເຈົ້າຊັງຊາຕານຫຼາຍ ແລະ ຊາຕານແມ່ນສັດຕູຂອງພຣະອົງ, ແລ້ວ ເປັນຫຍັງພຣະອົງຈຶ່ງສ້າງຊາຕານ? ໂດຍການສ້າງຊາຕານ, ພຣະອົງບໍ່ໄດ້ສ້າງສັດຕູບໍ? ແທ້ຈິງແລ້ວ ພຣະເຈົ້າບໍ່ໄດ້ສ້າງສັດຕູ; ໃນທາງກົງກັນຂ້າມ, ພຣະອົງສ້າງທູດສະຫວັນ ແລະຕໍ່ມາ ທູດສະຫວັນໄດ້ທໍລະຍົດພຣະອົງ. ສະຖານະຂອງມັນໄດ້ເຕີບໂຕຂຶ້ນຢ່າງຍິ່ງໃຫຍ່ຈົນມັນຕ້ອງການທໍລະຍົດຕໍ່ພຣະເຈົ້າ. ສາມາດເວົ້າໄດ້ວ່າ ນີ້ແມ່ນເຫດການບັງເອີນ ແຕ່ມັນເປັນສິ່ງທີ່ຫຼີກເວັ້ນບໍ່ໄດ້. ມັນຄືກັນກັບ ຄົນຕ້ອງຕາຍຢ່າງຫຼີກເວັ້ນບໍ່ໄດ້ຫຼັງຈາກທີ່ໄດ້ເຕີບໃຫຍ່ຂຶ້ນເຖິງຈຸດໃດໜຶ່ງ; ສິ່ງຕ່າງໆແມ່ນພັດທະນາໄປຕາມຂັ້ນຕອນນັ້ນ. ມີບາງຄົນທີ່ໂງ່ຈ້າເວົ້າວ່າ: "ໃນເມື່ອຊາຕານເປັນສັດຕູຂອງພຣະອົງແລ້ວເປັນຫຍັງພຣະອົງຈຶ່ງສ້າງມັນຂຶ້ນມາ? ພຣະອົງບໍ່ຮູ້ບໍ່ວ່າເທວະທູດສະຫວັນຈະທໍລະຍົດພຣະອົງ? ພຣະອົງບໍ່ສາມາດເຫັນທຸກສິ່ງໄດ້ທັງໝົດຢ່າງນິລັນດອນບໍ? ພຣະອົງບໍ່ຮູ້ຈັກທຳມະຊາດຂອງເທວະທູດບໍ? ໃນເມື່ອພຣະອົງຮູ້ຢ່າງຊັດເຈນວ່າ ມັນຈະທໍລະຍົດພຣະອົງ ແລ້ວເປັນຫຍັງພຣະອົງຈຶ່ງຕັ້ງໃຫ້ມັນເປັນເທວະທູດສະຫວັນ? ບໍ່ພຽງແຕ່ມັນທໍລະຍົດຕໍ່ພຣະອົງ ແຕ່ ມັນຍັງໄດ້ນຳພາພວກເທວະດາຫຼາຍ

ຕົນທຳລະຍົດພຣະອົງ ແລະ ໄດ້ລົງມາສູ່ໂລກຂອງມະນຸດເພື່ອເຮັດໃຫ້ມະນຸດເສື່ອມຊາມ; ແຕ່ຈົນເຖິງທຸກມື້ນີ້, ພຣະອົງກໍຍັງບໍ່ສາມາດປະຕິບັດຕາມແຜນການຄຸ້ມຄອງຫົກພັນປີຂອງພຣະອົງໃຫ້ສຳເລັດ". ຄຳເວົ້າເຫຼົ່ານັ້ນຖືກຕ້ອງບໍ? ເມື່ອເຈົ້າຄິດແບບນັ້ນ, ເຈົ້າບໍ່ໄດ້ນຳເອົາບັນຫາມາສູ່ຕົວເອງຫຼາຍຂຶ້ນເກີນຄວາມຈຳເປັນບໍ? ບາງຄົນຍັງໄດ້ເວົ້າວ່າ: "ຖ້າຊາຕານບໍ່ໄດ້ເຮັດໃຫ້ມວນມະນຸດເສື່ອມຊາມຈົນຮອດຍຸກປັດຈຸບັນ, ພຣະເຈົ້າກໍຈະບໍ່ໄດ້ນຳຄວາມລອດພົ້ນມາສູ່ມວນມະນຸດແບບນີ້. ໃນກໍລະນີນີ້, ສະຕິປັນຍາ ແລະ ລິດທານຸພາບຂອງພຣະເຈົ້າກໍຈະເບິ່ງບໍ່ເຫັນ; ແລ້ວສະຕິປັນຍາຂອງພຣະອົງຈະປາກົດຢູ່ໃສ? ດັ່ງນັ້ນ, ພຣະເຈົ້າຈຶ່ງຊົງສ້າງເຜົ່າພັນມະນຸດໃຫ້ຊາຕານ ເພື່ອວ່າໃນອະນາຄົດພຣະເຈົ້າຈະໄດ້ເປີດເຜີຍລິດທານຸພາບຂອງພຣະອົງ, ບໍ່ດັ່ງນັ້ນ, ມະນຸດຈະຄົ້ນພົບສະຕິປັນຍາຂອງພຣະເຈົ້າໄດ້ແນວໃດ? ຖ້າມະນຸດບໍ່ຕໍ່ຕ້ານພຣະອົງ ຫຼື ກະບົດຕໍ່ພຣະອົງ, ມັນກໍບໍ່ຈຳເປັນທີ່ຈະເປີດເຜີຍການກະທຳຂອງພຣະອົງ. ຖ້າສັບພະສິ່ງທັງໝົດນະມັດສະການພຣະອົງ ແລະ ເຊື່ອຟັງພຣະອົງ, ພຣະອົງກໍຈະບໍ່ມີພາລະກິດຕ້ອງເຮັດ". ສິ່ງນີ້ຍິ່ງຫ່າງໄກຈາກຄວາມເປັນຈິງຫຼາຍ, ເພາະວ່າບໍ່ມີສິ່ງໃດກ່ຽວກັບພຣະເຈົ້າທີ່ສົກກະປົກ, ດ້ວຍເຫດນັ້ນ ພຣະອົງແມ່ນບໍ່ສາມາດສ້າງຄວາມສົກກະປົກໄດ້. ພຣະອົງເປີດເຜີຍການກະທຳຂອງພຣະອົງໃນປັດຈຸບັນພຽງເພື່ອເອົາຊະນະສັດຕູຂອງພຣະອົງ, ເພື່ອຊ່ວຍມະນຸດຊາດ ທີ່ພຣະອົງໄດ້ສ້າງຂຶ້ນມາ, ເພື່ອເອົາຊະນະພວກຜີສາດ ແລະ ຊາຕານທີ່ກຽດຊັງພຣະອົງ, ທຳລະຍົດພຣະອົງ ແລະ ຕໍ່ຕ້ານພຣະອົງ ແລະ ຢູ່ພາຍໃຕ້ການປົກຄອງຂອງພຣະອົງ ແລະ ເປັນຂອງພຣະອົງຕັ້ງແຕ່ເລີ່ມຕົ້ນ. ພຣະເຈົ້າຕ້ອງການເອົາຊະນະພວກຜີສາດເຫຼົ່ານີ້ ແລະ ໃນການກະທຳເຊັ່ນນັ້ນ ພຣະອົງກໍຈະໄດ້ເປີດເຜີຍລິດທານຸພາບຂອງພຣະອົງຕໍ່ທຸກສິ່ງທັງປວງ. ມວນມະນຸດ ແລະ ທຸກສັບພະສິ່ງເທິງແຜ່ນດິນໂລກໃນປັດຈຸບັນນີ້ແມ່ນຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ແລະ ຢູ່ພາຍໃຕ້ການຄວບຄຸມຂອງຄົນຊົ່ວຮ້າຍ. ພຣະເຈົ້າຕ້ອງການເປີດເຜີຍການກະທຳຂອງພຣະອົງຕໍ່ທຸກສັບພະສິ່ງ ເພື່ອວ່າ ຜູ້ຄົນຈະໄດ້ຮູ້ຈັກພຣະອົງ ແລະ ດ້ວຍເຫດນັ້ນຈະເອົາຊະນະຊາຕານ ແລະ ທຳລາຍສັດຕູຂອງພຣະອົງໃຫ້ໝົດສິ້ນ. ພາລະກິດທັງໝົດນີ້ຈະສຳເລັດໂດຍຜ່ານການເປີດເຜີຍການກະທຳຂອງພຣະອົງ. ສິ່ງທີ່ມີຊີວິດທັງໝົດຂອງພຣະອົງແມ່ນຢູ່ພາຍໃຕ້ການຄວບຄຸມຂອງຊາຕານ, ດ້ວຍເຫດນັ້ນ ພຣະອົງຈຶ່ງຕ້ອງການເປີດເຜີຍລິດທານຸພາບສູງສຸດຂອງພຣະອົງໃຫ້ພວກເຂົາເຫັນ ເພື່ອເອົາຊະນະຊາຕານ. ຖ້າບໍ່ມີຊາຕານ ພຣະອົງຈະບໍ່ຈຳເປັນຕ້ອງເປີດເຜີຍການກະທຳຂອງພຣະອົງ. ຖ້າບໍ່ແມ່ນຍ້ອນການກໍ່ກວນຂອງຊາຕານ, ພຣະເຈົ້າກໍຈະສ້າງມວນມະນຸດ ແລະ ນຳພາພວກເຂົາໃຊ້ຊີວິດຢູ່ໃນສວນຂອງເອເດນ. ດ້ວຍເຫດໃດພຣະອົງຈຶ່ງບໍ່ເຄີຍເປີດເຜີຍການກະທຳຂອງພຣະອົງທັງໝົດໃຫ້ພວກທູດສະຫວັນ ຫຼື ເທວະທູດກ່ອນການທຳລະຍົດຂອງຊາຕານ? ຖ້າພວກທູດສະຫວັນ ແລະ ເທວະທູດໄດ້ຮູ້ຈັກພຣະອົງ ແລະ ເຊື່ອຟັງພຣະອົງແຕ່ເບື້ອງຕົ້ນ, ພຣະອົງກໍຈະບໍ່ໄດ້ດຳເນີນພາລະກິດທີ່ບໍ່ມີຄວາມໝາຍເຫຼົ່ານີ້. ຍ້ອນການມີຢູ່ຂອງຊາຕານ ແລະ ພວກມານຮ້າຍ ແລະ ມະນຸດເຊັ່ນກັນທີ່ໄດ້ຕໍ່ຕ້ານພຣະອົງ ແລະ ເຕັມໄປດ້ວຍອຸປະນິໄສອັນຊົ່ວຮ້າຍ. ດ້ວຍເຫດນີ້ ພຣະອົງຈຶ່ງຕ້ອງການເປີດເຜີຍການກະທຳຂອງພຣະອົງ. ເນື່ອງຈາກພຣະອົງຕ້ອງການເຮັດສົງຄາມກັບຊາຕານ, ພຣະອົງຈຶ່ງຕ້ອງໃຊ້ອຳນາດຂອງພຣະອົງເອງ ແລະ ທຸກການກະທຳຂອງພຣະອົງ

ເພື່ອເອົາຊະນະຊາຕານ; ດ້ວຍວິທີນີ້, ພາລະກິດແຫ່ງການລອດພົ້ນຂອງພຣະອົງທີ່ພຣະອົງປະຕິບັດທ່າມກາງມະນຸດຊາດຈະເຮັດໃຫ້ພວກເຂົາເຫັນສະຕິປັນຍາ ແລະ ລິດທານຸພາບອັນສູງສຸດຂອງພຣະອົງ. ພາລະກິດທີ່ພຣະເຈົ້າກະທຳໃນມື້ນີ້ມີຄວາມໝາຍ ແລະ ບໍ່ມີລັກສະນະຄ້າຍຄືກັບທີ່ຄົນບາງຄົນໝາຍເຖິງເມື່ອພວກເຂົາເວົ້າວ່າ: "ພາລະກິດທີ່ພຣະອົງກະທຳບໍ່ໄດ້ຂັດແຍ້ງກັນບໍ? ການກະທຳພາລະກິດຢ່າງຕໍ່ເນື່ອງແບບນີ້ບໍ່ເປັນພຽງແຕ່ການສ້າງບັນຫາໃຫ້ຕົວພຣະອົງເອງບໍ? ພຣະອົງສ້າງຊາຕານ ແລ້ວປ່ອຍໃຫ້ມັນທໍລະຍົດຕໍ່ພຣະອົງ ແລະ ຕໍ່ຕ້ານພຣະອົງ. ພຣະອົງສ້າງມວນມະນຸດ ແລະ ຫຼັງຈາກນັ້ນກໍມອບພວກເຂົາໃຫ້ກັບຊາຕານ, ປ່ອຍໃຫ້ອາດາມ ແລະ ເອວາຖືກລໍ້ລວງ. ໃນເມື່ອພຣະອົງໄດ້ເຮັດສິ່ງທັງຫມົດເຫຼົ່ານີ້ໂດຍເຈດຕະນາ, ເປັນຫຍັງພຣະອົງຈຶ່ງຍັງກຽດຊັງມວນມະນຸດ? ເປັນຫຍັງພຣະອົງຈຶ່ງກຽດຊັງຊາຕານ? ສິ່ງເຫຼົ່ານີ້ບໍ່ແມ່ນຜົນຂອງການຊົງສ້າງຂອງພຣະອົງເອງບໍ? ແລ້ວເປັນຫຍັງພຣະອົງຈຶ່ງກຽດຊັງ?" ຂ້ອນຂ້າງມີຄົນໂງ່ຫຼາຍຄົນທີ່ເວົ້າແບບນັ້ນ. ພວກເຂົາຕ້ອງການທີ່ຈະຮັກພຣະເຈົ້າ, ແຕ່ເລິກໆແລ້ວພວກເຂົາຈົ່ມໃຫ້ພຣະເຈົ້າ. ຊ່າງຂັດແຍ້ງກັນແທ້ໆ! ເຈົ້າບໍ່ເຂົ້າໃຈຄວາມຈິງ, ເຈົ້າມີຄວາມຄິດເໜືອທຳມະຊາດຫຼາຍເກີນໄປ ແລະ ເຈົ້າຍັງໄດ້ອ້າງວ່າ ນີ້ແມ່ນຄວາມຜິດພາດຂອງພຣະເຈົ້າ, ເຈົ້າຊ່າງໂງ່ຈ້າແທ້ໆ! ມັນແມ່ນເຈົ້າທີ່ເປັນຜູ້ທີ່ບິດເບືອນຄວາມຈິງ; ມັນບໍ່ແມ່ນຄວາມຜິດພາດຂອງພຣະເຈົ້າ! ບາງຄົນເຖິງກັບຈົ່ມແລ້ວຈົ່ມອີກວ່າ: "ມັນແມ່ນພຣະອົງທີ່ເປັນຜູ້ສ້າງຊາຕານ ແລະ ພຣະອົງເປັນຜູ້ທີ່ໂຍນຊາຕານມາສູ່ທ່າມກາງມະນຸດ ແລະ ມອບມະນຸດໃຫ້ກັບມັນ. ເມື່ອມະນຸດຊາດມີອຸປະນິໄສຂອງຊາຕານ, ແທນທີ່ຈະໃຫ້ອະໄພພວກເຂົາ, ພຣະອົງພັດກຽດຊັງພວກເຂົາຈົນເຖິງລະດັບໃດໜຶ່ງ. ຕອນທຳອິດ ພຣະອົງຮັກມະນຸດຊາດໃນລະດັບໜຶ່ງ ແຕ່ ປັດຈຸບັນພຣະອົງແມ່ນກຽດຊັງພວກເຂົາ. ມັນແມ່ນພຣະອົງທີ່ເປັນຜູ້ກຽດຊັງມະນຸດຊາດ ແລະ ມັນຍັງແມ່ນພຣະອົງທີ່ເປັນຜູ້ຮັກມະນຸດຊາດ. ມັນເກີດຫຍັງຂຶ້ນກັນແທ້? ສິ່ງນີ້ບໍ່ແມ່ນຂັດແຍ້ງກັນບໍ?" ບໍ່ວ່າພວກເຈົ້າຈະເບິ່ງມັນໃນລັກສະນະໃດ, ນີ້ແມ່ນສິ່ງທີ່ເກີດຂຶ້ນໃນສະຫວັນ; ນີ້ເປັນວິທີທີ່ຫົວໜ້າທູດສະຫວັນໄດ້ທໍລະຍົດພຣະເຈົ້າ ແລະ ມະນຸດຊາດຖືກເຮັດໃຫ້ເສື່ອມຊາມ ແລະ ນີ້ຄືເສັ້ນທາງທີ່ມະນຸດຊາດໄດ້ສືບຕໍ່ເດີນມາຈົນເຖິງທຸກວັນນີ້. ບໍ່ວ່າພວກເຈົ້າຈະກ່າວແບບໃດກໍຕາມ, ນີ້ຄືເລື່ອງລາວທັງໝົດ. ແຕ່ພວກເຈົ້າຕ້ອງເຂົ້າໃຈວ່າ ຈຸດປະສົງທີ່ຢູ່ເບື້ອງຫຼັງພາລະກິດທັງໝົດທີ່ພຣະເຈົ້າກຳລັງປະຕິບັດໃນມື້ນີ້ແມ່ນເພື່ອຊ່ວຍໃຫ້ພວກເຈົ້າລອດພົ້ນ ແລະ ເພື່ອເອົາຊະນະຊາຕານ.

ເນື່ອງຈາກວ່າ ທູດສະຫວັນມີຄວາມອ່ອນແອ ແລະ ບໍ່ມີຄວາມສາມາດໃດໆ, ພວກເຂົາຈຶ່ງຍິ່ງອວດດີ ເມື່ອພວກເຂົາໄດ້ຮັບສິດອຳນາດ, ໂດຍສະເພາະແມ່ນເທວະທູດສະຫວັນ ຜູ້ທີ່ມີສະຖານະສູງກວ່າເທວະດາອື່ນໆ. ເທວະທູດສະຫວັນແມ່ນພຣະລາຊາຂອງເທວະດາທັງປວງ. ມັນນຳພາເທວະດາຈຳນວນຫຼາຍລ້ານ ແລະ ພາຍໃຕ້ພຣະເຢໂຮວາ ອຳນາດຂອງມັນແມ່ນເໜືອກວ່າເທວະດາຕົນອື່ນໆ. ມັນຕ້ອງການເຮັດນີ້ ແລະ ນັ້ນ ເພື່ອນຳພາພວກເທວະດາໄປສູ່ໂລກຂອງມະນຸດເພື່ອປົກຄອງໂລກ. ພຣະເຈົ້າໄດ້ກ່າວວ່າ ພຣະອົງປົກຄອງຈັກກະວານ; ແຕ່ເທວະທູດສະຫວັນອ້າງວ່າ ຈັກກະວານແມ່ນຢູ່ພາຍໃຕ້ການປົກຄອງຂອງຕົນ ແລະ ສະນັ້ນ ມັນຈຶ່ງໄດ້ທໍລະຍົດຕໍ່ພຣະເຈົ້າ. ໃນສະຫວັນ, ພຣະເຈົ້າໄດ້

ສ້າງໂລກອີກໜ່ວຍ ແລະ ເທວະທູດສະຫວັນຕ້ອງການປົກຄອງໂລກນີ້ ແລະ ຍັງຕ້ອງການລົງມາສູ່ໂລກມະນຸດອີກດ້ວຍ. ພຣະເຈົ້າຈະອະນຸຍາດໃຫ້ມັນເຮັດແບບນີ້ໄດ້ບໍ? ດັ່ງນັ້ນ, ພຣະອົງຈຶ່ງໂຈມຕີເທວະທູດສະຫວັນ ແລະ ໂຍນມັນລົງກາງອາກາດ. ນັບແຕ່ນັ້ນມາມັນຈຶ່ງໄດ້ເຮັດໃຫ້ມະນຸດເສື່ອມຊາມ, ພຣະເຈົ້າໄດ້ເຮັດສົງຄາມກັບມັນເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ; ພຣະອົງໄດ້ໃຊ້ເວລາຫົກພັນປີເພື່ອເອົາຊະນະມັນ. ແນວຄວາມຄິດຂອງພວກເຈົ້າກ່ຽວກັບພຣະເຈົ້າອົງຊົງລິດທານຸພາບສູງສຸດ ແມ່ນບໍ່ແທດເໝາະກັບພາລະກິດທີ່ພຣະເຈົ້າດຳເນີນໃນປັດຈຸບັນ; ມັນໃຊ້ບໍ່ໄດ້ໃນທາງປະຕິບັດ ແລະ ໄຮ້ສາລະຫຼາຍ! ທີ່ຈິງແລ້ວ, ພຣະເຈົ້າໄດ້ປະກາດວ່າ ເທວະທູດສະຫວັນເປັນສັດຕູຂອງພຣະອົງພຽງຫຼັງຈາກມັນໄດ້ທໍລະຍົດພຣະອົງ. ມັນເປັນຍ້ອນການທໍລະຍົດຂອງມັນ ທີ່ມັນໄດ້ຢຽບຢໍ່າມະນຸດຊາດ ຫຼັງຈາກມາຮອດໂລກຂອງມະນຸດ ແລະ ຍ້ອນເຫດຜົນນີ້ ມະນຸດຈຶ່ງໄດ້ພັດທະນາມາສູ່ຈຸດນີ້. ຫຼັງຈາກສິ່ງນັ້ນເກີດຂຶ້ນ, ພຣະເຈົ້າກໍໄດ້ປະຕິຍານກັບຊາຕານວ່າ: "ເຮົາຈະເອົາຊະນະເຈົ້າ ແລະ ນຳເອົາຄວາມລອດພົ້ນມາສູ່ມະນຸດຊາດທີ່ເຮົາສ້າງຂຶ້ນທັງໝົດ". ທຳອິດຊາຕານບໍ່ເຊື່ອ ແລະ ໄດ້ກ່າວວ່າ: "ພຣະອົງຈະສາມາດເຮັດຫຍັງກັບຂ້ານ້ອຍໄດ້? ພຣະອົງສາມາດໂຍນຂ້ານ້ອຍລົງກາງອາກາດໄດ້ແທ້ບໍ? ພຣະອົງສາມາດເອົາຊະນະຂ້ານ້ອຍໄດ້ແທ້ບໍ?" ຫຼັງຈາກທີ່ພຣະເຈົ້າໄດ້ໂຍນມັນລົງກາງອາກາດ, ພຣະອົງກໍບໍ່ໄດ້ໃຫ້ຄວາມສົນໃຈກັບເທວະທູດສະຫວັນອີກ ແລະ ຫຼັງຈາກນັ້ນພຣະອົງກໍເລີ່ມຕົ້ນຊ່ວຍມະນຸດໃຫ້ລອດພົ້ນ ແລະ ປະຕິບັດພາລະກິດຂອງພຣະອົງເອງ ເຖິງແມ່ນວ່າ ຊາຕານຈະກໍ່ກວນຢ່າງຕໍ່ເນື່ອງກໍຕາມ. ຊາຕານສາມາດເຮັດນັ້ນ ແຕ່ທັງໝົດຕ້ອງຂອບພຣະຄຸນອຳນາດທີ່ພຣະເຈົ້າປະທານໃຫ້ມັນ; ມັນໄດ້ນຳເອົາສິ່ງເຫຼົ່ານີ້ລົງມາກັບມັນໃນກາງອາກາດ ແລະ ຍັງເກັບຮັກສາສິ່ງເຫຼົ່ານີ້ຈົນເຖິງທຸກມື້ນີ້. ເມື່ອພຣະເຈົ້າໂຍນມັນລົງສູ່ກາງອາກາດ ພຣະອົງບໍ່ໄດ້ເອົາອຳນາດຄືນຈາກມັນ ແລະ ດ້ວຍເຫດນັ້ນ ມັນຈຶ່ງສືບຕໍ່ເຮັດໃຫ້ມະນຸດເສື່ອມຊາມ. ໃນດ້ານກົງກັນຂ້າມ, ພຣະເຈົ້າໄດ້ເລີ່ມຕົ້ນຊ່ວຍເຫຼືອມະນຸດ ທີ່ຊາຕານເຮັດໃຫ້ເສື່ອມຊາມຫຼັງຈາກທີ່ພວກເຂົາໄດ້ຖືກສ້າງຂຶ້ນມາ. ພຣະເຈົ້າບໍ່ໄດ້ເປີດເຜີຍການກະທຳຂອງພຣະອົງໃນຂະນະທີ່ຢູ່ໃນສະຫວັນ; ແຕ່ວ່າ ກ່ອນທີ່ຈະສ້າງແຜ່ນດິນໂລກ, ພຣະອົງໄດ້ອະນຸຍາດໃຫ້ປະຊາຊົນເທິງໂລກທີ່ພຣະອົງສ້າງຂຶ້ນໃນສະຫວັນໄດ້ເຫັນການກະທຳຂອງພຣະອົງ ເພື່ອນຳພາຜູ້ຄົນຢູ່ເທິງສະຫວັນ. ພຣະອົງໄດ້ໃຫ້ປັນຍາ ແລະ ຄວາມສະຫຼາດແກ່ພວກເຂົາ ແລະ ນຳພາຜູ້ຄົນເຫຼົ່ານັ້ນມາອາໄສຢູ່ໃນໂລກນັ້ນ. ໂດຍທຳມະຊາດແລ້ວ, ບໍ່ມີຜູ້ໃດໃນກຸ່ມພວກເຈົ້າເຄີຍໄດ້ຍິນເລື່ອງນີ້ມາກ່ອນ. ຕໍ່ມາ, ຫຼັງຈາກພຣະເຈົ້າໄດ້ສ້າງມະນຸດຊາດ, ເທວະທູດສະຫວັນກໍເລີ່ມເຮັດໃຫ້ພວກເຂົາເສື່ອມຊາມ; ເທິງແຜ່ນດິນໂລກ, ມະນຸດຊາດທັງໝົດແມ່ນຕົກຢູ່ໃນສະພາບສັບສົນວຸ້ນວາຍ. ດ້ວຍເຫດນັ້ນ ພຣະອົງຈຶ່ງໄດ້ເລີ່ມເຮັດສົງຄາມກັບຊາຕານ ແລະ ມັນແມ່ນດ້ວຍເຫດນັ້ນ ຜູ້ຄົນຈຶ່ງເຫັນການກະທຳຂອງພຣະອົງ. ທຳອິດ, ການກະທຳຂອງພຣະອົງໄດ້ຖືກປິດບັງຈາກມະນຸດ. ຫຼັງຈາກຊາຕານໄດ້ຖືກໂຍນລົງສູ່ກາງອາກາດ, ມັນກໍເຮັດວຽກຂອງມັນເອງ ແລະ ພຣະເຈົ້າກໍສືບຕໍ່ປະຕິບັດພາລະກິດຂອງພຣະອົງເອງ ໂດຍສືບຕໍ່ເຮັດສົງຄາມກັບມັນຈົນເຖິງຍຸກສຸດທ້າຍ. ບັດນີ້ ມັນເຖິງເວລາແລ້ວທີ່ຊາຕານຄວນຖືກທຳລາຍ. ໃນຕອນເລີ່ມຕົ້ນ, ພຣະເຈົ້າໄດ້ໃຫ້ອຳນາດແກ່ມັນ ແລະ ຫຼັງຈາກນັ້ນ ພຣະເຈົ້າກໍໂຍນມັນລົງສູ່ກາງອາກາດແຕ່

ມັນກໍຍັງບໍ່ເຊື່ອຟັງ. ຫຼັງຈາກນັ້ນ, ມັນໄດ້ເຮັດໃຫ້ມະນຸດຊາດເສື່ອມຊາມເທິງແຜ່ນດິນໂລກ ແຕ່ພຣະເຈົ້າກໍຢູ່ທີ່ນັ້ນ ເພື່ອຄຸ້ມຄອງມະນຸດຊາດ. ພຣະເຈົ້າໃຊ້ການຄຸ້ມຄອງມະນຸດຂອງພຣະອົງເພື່ອເອົາຊະນະຊາຕານ. ໂດຍການເຮັດໃຫ້ຄົນເສື່ອມຊາມ, ຊາຕານນຳພາຊະຕາກຳຂອງພວກເຂົາໄປສູ່ຈຸດຈົບ ແລະ ກໍ່ກວນພາລະກິດຂອງພຣະເຈົ້າ. ໃນທາງກົງກັນຂ້າມ, ພາລະກິດຂອງພຣະເຈົ້າແມ່ນການຊ່ວຍມະນຸດຊາດໃຫ້ລອດພົ້ນ. ຂັ້ນຕອນໃດຂອງພາລະກິດຂອງພຣະເຈົ້າທີ່ບໍ່ໄດ້ໝາຍເຖິງການຊ່ວຍມະນຸດຊາດໃຫ້ລອດພົ້ນ? ຂັ້ນຕອນໃດທີ່ບໍ່ໄດ້ໝາຍເຖິງການຊຳລະລ້າງຜູ້ຄົນ ແລະ ເພື່ອເຮັດໃຫ້ພວກເຂົາກະທຳສິ່ງທີ່ຊອບທຳ ແລະ ດຳລົງຊີວິດຕາມລັກສະນະຂອງຜູ້ທີ່ສາມາດຖືກຮັກ? ຢ່າງໃດກໍຕາມ, ຊາຕານບໍ່ໄດ້ເຮັດສິ່ງນີ້. ມັນເຮັດໃຫ້ມະນຸດເສື່ອມຊາມ; ມັນດຳເນີນວຽກງານຢ່າງຕໍ່ເນື່ອງເພື່ອເຮັດໃຫ້ມະນຸດເສື່ອມຊາມທົ່ວທັງຈັກກະວານ. ແນ່ນອນ, ພຣະເຈົ້າກໍເຮັດພາລະກິດຂອງພຣະອົງເອງເຊັ່ນກັນ. ພຣະອົງບໍ່ສົນໃຈຊາຕານ. ບໍ່ວ່າອຳນາດຂອງຊາຕານຈະມີຫຼາຍເທົ່າໃດກໍຕາມ, ອຳນາດທີ່ມັນມີກໍແມ່ນມາຈາກພຣະເຈົ້າ; ພຣະເຈົ້າບໍ່ໄດ້ມອບອຳນາດທັງໝົດຂອງພຣະອົງໃຫ້ມັນ ແລະ ດ້ວຍເຫດນັ້ນ ບໍ່ວ່າມັນຈະເຮັດຫຍັງກໍຕາມ, ມັນບໍ່ສາມາດເຮັດເໜືອພຣະເຈົ້າ ແລະ ຈະຢູ່ພາຍໃຕ້ກຳມືຂອງພຣະເຈົ້າສະເໝີ. ພຣະເຈົ້າບໍ່ໄດ້ເປີດເຜີຍການກະທຳໃດໆຂອງພຣະອົງເມື່ອຢູ່ໃນສະຫວັນ. ພຣະອົງພຽງແຕ່ມອບອຳນາດສ່ວນເລັກໆນ້ອຍໆໃຫ້ກັບຊາຕານ ແລະ ອະນຸຍາດໃຫ້ມັນໃຊ້ເພື່ອຄວບຄຸມທູດສະຫວັນອື່ນໆ. ເພາະສະນັ້ນ, ບໍ່ວ່າມັນຈະເຮັດຫຍັງ, ມັນກໍບໍ່ສາມາດເຮັດເໜືອອຳນາດຂອງພຣະເຈົ້າໄດ້ ເພາະວ່າອຳນາດທີ່ພຣະເຈົ້າມອບໃຫ້ມັນໃນເບື້ອງຕົ້ນແມ່ນມີຂໍ້ຈຳກັດ. ໃນຂະນະທີ່ພຣະເຈົ້າປະຕິບັດພາລະກິດ, ຊາຕານກໍລົບກວນ. ໃນຍຸກສຸດທ້າຍ, ການລົບກວນຂອງມັນຈະສິ້ນສຸດລົງ; ໃນກໍລະນີດຽວກັນ, ພາລະກິດຂອງພຣະເຈົ້າກໍຈະສິ້ນສຸດລົງ ແລະ ປະເພດຂອງມະນຸດທີ່ພຣະເຈົ້າຕ້ອງການເຮັດໃຫ້ສົມບູນກໍຈະສົມບູນ. ພຣະເຈົ້າຊີ້ນຳຜູ້ຄົນໄປໃນທາງບວກ; ຊີວິດຂອງພຣະອົງຄືນໍ້າແຫ່ງຊີວິດ, ບໍ່ສາມາດວັດແທກໄດ້ ແລະ ບໍ່ມີຂອບເຂດ. ຊາຕານໄດ້ເຮັດໃຫ້ຜູ້ຄົນເສື່ອມຊາມໃນລະດັບໜຶ່ງ; ສຸດທ້າຍ, ນໍ້າແຫ່ງຊີວິດຈະເຮັດໃຫ້ຜູ້ຄົນສົມບູນ ແລະ ມັນຈະເປັນໄປບໍ່ໄດ້ທີ່ຊາຕານຈະແຊກແຊງ ແລະ ດຳເນີນວຽກງານຂອງມັນໄດ້ອີກ. ດັ່ງນັ້ນ, ພຣະເຈົ້າຈຶ່ງຈະຮັບເອົາຜູ້ຄົນເຫຼົ່ານີ້ທຸກຄົນຢ່າງສົມບູນ. ເຖິງຢ່າງນັ້ນໃນປັດຈຸບັນຊາຕານກໍຍັງປະຕິເສດທີ່ຈະຍອມຮັບສິ່ງນີ້; ມັນສືບຕໍ່ຕັ້ງຕົນເອງເປັນປໍລະປັກກັບພຣະເຈົ້າແຕ່ພຣະເຈົ້າບໍ່ສົນໃຈມັນ. ພຣະອົງໄດ້ກ່າວວ່າ: "ເຮົາຈະເອົາຊະນະເໜືອອຳນາດມືດ ແລະ ອິດທິພົນມືດທັງໝົດຂອງຊາຕານ". ນີ້ແມ່ນພາລະກິດທີ່ຕ້ອງໄດ້ປະຕິບັດໃຫ້ສຳເລັດໃນເນື້ອໜັງ ແລະ ມັນຍັງເປັນສິ່ງທີ່ເຮັດໃຫ້ການກາຍເປັນເນື້ອໜັງມີຄວາມສຳຄັນ: ນັ້ນກໍຄື ເພື່ອເຮັດສຳເລັດຂັ້ນຕອນຂອງພາລະກິດໃນການເອົາຊະນະຊາຕານໃນຍຸກສຸດທ້າຍ ແລະ ເພື່ອທຳລາຍລ້າງທຸກສິ່ງທີ່ເປັນຂອງຊາຕານ. ການເອົາຊະນະຂອງພຣະເຈົ້າເໜືອຊາຕານແມ່ນຫຼີກເວັ້ນບໍ່ໄດ້! ຄວາມຈິງແລ້ວ ຊາຕານໄດ້ລົ້ມເຫຼວມາແຕ່ດົນແລ້ວ. ເມື່ອພຣະກິດຕິຄຸນໄດ້ເລີ່ມແຜ່ຂະຫຍາຍໄປທົ່ວແຜ່ນດິນຂອງມັງກອນແດງທີ່ຍິ່ງໃຫຍ່, ນັ້ນກໍຄື ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ເລີ່ມຕົ້ນເຮັດພາລະກິດ ແລະ ພາລະກິດດັ່ງກ່າວນີ້ກໍໄດ້ເລີ່ມເຄື່ອນໄຫວ, ຊາຕານແມ່ນຖືກເອົາຊະນະຢ່າງສົມບູນແລ້ວ ເພາະວ່າຈຸດປະສົງຂອງການບັງເກີດເປັນມະນຸດແມ່ນເພື່ອ

ທຳລາຍລ້າງຊາຕານ. ທັນທີໃດທີ່ຊາຕານໄດ້ເຫັນວ່າພຣະເຈົ້າໄດ້ກາຍເປັນເນື້ອໜັງອີກເທື່ອໜຶ່ງ ແລະ ໄດ້ເລີ່ມຕົ້ນປະຕິບັດພາລະກິດຂອງພຣະອົງ ເຊິ່ງບໍ່ມີອຳນາດໃດຈະສາມາດຢຸດຢັ້ງພາລະກິດນັ້ນໄດ້, ສະນັ້ນ, ຊາຕານຈຶ່ງໄດ້ແຕ່ຕົກສະເທີ້ເມື່ອເຫັນພາລະກິດດັ່ງກ່າວ ແລະ ບໍ່ກ້າທີ່ຈະເຮັດຄວາມຜິດອີກຕໍ່ໄປ. ໃນເບື້ອງຕົ້ນຊາຕານຄິດວ່າມັນມີສະຕິປັນຍາຢ່າງຫຼວງຫຼາຍ, ມັນຈຶ່ງຂັດຂວາງ ແລະ ລົບກວນພາລະກິດຂອງພຣະເຈົ້າ; ແຕ່ ມັນຄາດບໍ່ເຖິງເລີຍວ່າ ພຣະເຈົ້າຈະກາຍເປັນເນື້ອໜັງອີກເທື່ອຫນຶ່ງ ແລະ ໃນພາລະກິດຂອງພຣະອົງ, ພຣະເຈົ້າໄດ້ໃຊ້ການຕໍ່ຕ້ານຂອງຊາຕານ ເພື່ອເປັນການເປີດເຜີຍ ແລະ ການພິພາກສາມະນຸດຊາດເພື່ອປົກຄອງມະນຸດ ແລະ ເອົາຊະນະຊາຕານ. ພຣະເຈົ້າຊົງສະຫຼາດກວ່າຊາຕານ ແລະ ພາລະກິດຂອງພຣະອົງແມ່ນເໜືອກວ່າມັນຫຼາຍ. ເພາະສະນັ້ນ, ດັ່ງທີ່ເຮົາໄດ້ກ່າວກ່ອນໜ້ານີ້ວ່າ: "ພາລະກິດທີ່ເຮົາປະຕິບັດແມ່ນເພື່ອຕອບໂຕ້ກົນອຸບາຍຂອງຊາຕານ; ໃນທີ່ສຸດ ເຮົາຈະເປີດເຜີຍລິດທານຸພາບສູງສຸດຂອງເຮົາ ແລະ ຄວາມບໍ່ມີອຳນາດຂອງຊາຕານ". ພຣະເຈົ້າກະທຳພາລະກິດຂອງພຣະອົງໃນແຖວໜ້າ ແລະ ຊາຕານຈະນຳຫຼັງພຣະອົງ, ຈົນກວ່າໃນທີ່ສຸດມັນກໍຈະຖືກທຳລາຍ. ມັນຈະບໍ່ຮູ້ດ້ວຍຊໍ້າວ່າ ແມ່ນຫຍັງຕີມັນ! ເຊື່ອມັນຈະຮູ້ຄວາມຈິງແມ່ນມັນໄດ້ຖືກທຸບຕີ ແລະ ຢຽບຢໍ່າແລ້ວ; ເຖິງເວລານັ້ນມັນກໍຈະຖືກເຜົາໄໝ້ຢູ່ໃນທະເລສາບແຫ່ງແປວໄຟ. ແລ້ວໃນຕອນນັ້ນ ມັນຍັງຈະບໍ່ຍອມເຊື່ອຢ່າງເຕັມທີ່ບໍ? ເພາະວ່າມັນບໍ່ມີກົນອຸບາຍເຫຼືອໃຫ້ໃຊ້ອີກແລ້ວ!

ມັນແມ່ນພາລະກິດແທ້ຈິງ ແລະ ຢ່າງເປັນຂັ້ນຕອນນີ້ທີ່ມັກເຮັດໃຫ້ຈິດໃຈຂອງພຣະເຈົ້າມີຄວາມໂສກເສົ້າຕໍ່ມະນຸດ ດັ່ງນັ້ນ ສົງຄາມຂອງພຣະອົງກັບຊາຕານຈຶ່ງຍືນຍາວເປັນເວລາຫົກພັນປີ ແລະ ພຣະເຈົ້າກໍໄດ້ກ່າວວ່າ: "ເຮົາຈະບໍ່ສ້າງມະນຸດຊາດອີກ ແລະ ເຮົາຈະບໍ່ມອບອຳນາດໃຫ້ກັບທູດສະຫວັນອີກ". ນັບຕັ້ງແຕ່ນັ້ນມາ, ເມື່ອທູດສະຫວັນລົງມາເຮັດວຽກຢູ່ເທິງແຜ່ນດິນໂລກ, ພວກເຂົາພຽງແຕ່ຕິດຕາມພຣະເຈົ້າເພື່ອເຮັດພາລະກິດບາງຢ່າງ. ພຣະອົງບໍ່ເຄີຍໃຫ້ອຳນາດແກ່ທູດສະຫວັນອີກ. ທູດສະຫວັນທີ່ຊາວອິດສະຣາເອນເຫັນປະຕິບັດວຽກງານຂອງພວກເຂົາໄດ້ແນວໃດ? ພວກເຂົາໄດ້ເປີດເຜີຍຕົວເອງໃນຄວາມຝັນ ແລະ ຖ່າຍທອດຄຳເວົ້າຂອງພຣະເຢໂຮວາ. ເມື່ອພຣະເຢຊູຟື້ນຄືນຊີວິດສາມມື້ຫຼັງຈາກທີ່ຖືກຄຶງ, ມັນແມ່ນທູດສະຫວັນທີ່ຍູ້ໂງ່ນຫີນໄປໄວ້ທາງຂ້າງ; ພຣະວິນຍານຂອງພຣະເຈົ້າບໍ່ໄດ້ເຮັດພາລະກິດນີ້ດ້ວຍຕົວເອງ. ມີແຕ່ທູດສະຫວັນທີ່ເຮັດວຽກແບບນີ້; ພວກເຂົາມີບົດບາດເພື່ອສະໜັບສະໜູນ ແຕ່ບໍ່ມີອຳນາດ ເພາະວ່າພຣະເຈົ້າຈະບໍ່ມອບອຳນາດໃຫ້ພວກເຂົາອີກ. ຫຼັງຈາກທີ່ໄດ້ເຮັດພາລະກິດເປັນເວລາອັນສົມຄວນ, ຜູ້ຄົນທີ່ພຣະເຈົ້າໃຊ້ຢູ່ເທິງແຜ່ນດິນໂລກກໍຮັບເອົາຕຳແໜ່ງຂອງພຣະເຈົ້າ ແລະ ກ່າວວ່າ: "ຂ້ານ້ອຍຕ້ອງການຢູ່ເໜືອຈັກກະວານ! ຂ້ານ້ອຍຕ້ອງການຢືນຢູ່ໃນສະຫວັນຊັ້ນທີສາມ! ພວກຂ້ານ້ອຍຕ້ອງການປົກຄອງດ້ວຍອຳນາດສູງສຸດ!" ພວກເຂົາຈະກາຍເປັນຄົນອວດດີຫຼັງຈາກທີ່ໄດ້ເຮັດວຽກມາຫຼາຍມື້; ພວກເຂົາຕ້ອງການອຳນາດສູງສຸດໃນແຜ່ນດິນໂລກ, ເພື່ອສ້າງອີກປະເທດໜຶ່ງ, ເພື່ອໃຫ້ສັບພະສິ່ງທັງໝົດຢູ່ພາຍໃຕ້ຕີນຂອງພວກເຂົາ ແລະ ເພື່ອຢືນຢູ່ໃນສະຫວັນຊັ້ນທີສາມ. ເຈົ້າບໍ່ຮູ້ວ່າເຈົ້າເປັນພຽງມະນຸດທີ່ພຣະເຈົ້າໃຊ້ບໍ? ເຈົ້າຈະສາມາດຂຶ້ນສະຫວັນຊັ້ນທີສາມໄດ້ແນວໃດ? ພຣະເຈົ້າມາສູ່ໂລກເພື່ອເຮັດພາລະກິດຢ່າງງຽບໆ ໂດຍບໍ່ໄດ້ປ່າວປະກາດ ແລະ ຫຼັງຈາກທີ່

ໄດ້ເຮັດພາລະກິດສຳເລັດລົງຢ່າງງຽບໆ ພຣະອົງກໍຈາກໄປ. ພຣະອົງບໍ່ເຄີຍປ່າວປະກາດຄືດັ່ງທີ່ມະນຸດເຮັດ, ແຕ່ໃນທາງກົງກັນຂ້າມ ປະຕິບັດພາລະກິດຂອງພຣະອົງຢ່າງມີເຫດຜົນ. ພຣະອົງບໍ່ເຄີຍເຂົ້າໄປໃນຄຣິດຕະຈັກ ແລະ ປ່າວປະກາດວ່າ: "ເຮົາຈະກວາດລ້າງພວກເຈົ້າທຸກຄົນ! ເຮົາຈະສາບແຊ່ງ ແລະ ຂ້ຽນຕີພວກເຈົ້າ!" ພຣະອົງພຽງແຕ່ປະຕິບັດພາລະກິດຂອງພຣະອົງເທົ່ານັ້ນ ແລະ ຈາກໄປເມື່ອພຣະອົງເຮັດສຳເລັດ. ຜູ້ສອນສາສະໜາເຫຼົ່ານັ້ນທີ່ປິ່ນປົວຄົນເຈັບປ່ວຍ ແລະ ຂັບໄລ່ພວກຜີສາດ, ສັ່ງສອນຄົນອື່ນດ້ວຍການເທດສະໜາ, ກ່າວປາໄສຢາງຍືດຍາວ ແລະ ແບບນໍ້າຖ້ວມທົ່ງ ແລະ ສົນທະນາກ່ຽວກັບເລື່ອງທີ່ບໍ່ມີຄວາມເປັນຈິງ ລ້ວນແລ້ວແຕ່ ອວດດີທີ່ສຸດ! ພວກເຂົາເປັນເຊື້ອສາຍຂອງເທວະທູດ!

ຫຼັງຈາກທີ່ປະຕິບັດພາລະກິດຫົກພັນປີຂອງພຣະອົງຈົນມາເຖິງປັດຈຸບັນ, ພຣະເຈົ້າໄດ້ເປີດເຜີຍການກະທຳຫຼາຍຢ່າງຂອງພຣະອົງ ໂດຍທີ່ເປົ້າໝາຍຫຼັກໆແມ່ນເພື່ອເອົາຊະນະຊາຕານ ແລະ ນຳເອົາຄວາມລອດພົ້ນມາສູ່ມະນຸດຊາດທັງໝົດ. ພຣະອົງໃຊ້ໂອກາດນີ້ເພື່ອອະນຸຍາດໃຫ້ທຸກສິ່ງທຸກຢ່າງຢູ່ໃນສະຫວັນ, ທຸກສິ່ງທຸກຢ່າງເທິງແຜ່ນດິນໂລກ, ທຸກສິ່ງທຸກຢ່າງຢູ່ໃນທະເລ ແລະ ທຸກສັບພະສິ່ງແຫ່ງການສ້າງຂອງພຣະເຈົ້າເທິງແຜ່ນດິນໂລກໄດ້ເຫັນລິດທານຸພາບສູງສຸດຂອງພຣະເຈົ້າ ແລະ ປະຈັກທຸກການກະທຳຂອງພຣະອົງ. ພຣະອົງຍາດເອົາໂອກາດໃນການເອົາຊະນະຊາຕານເພື່ອເປີດເຜີຍທຸກການກະທຳຂອງພຣະອົງຕໍ່ມະນຸດຊາດ ແລະ ອະນຸຍາດໃຫ້ຜູ້ຄົນສາມາດສັນລະເສີນພຣະອົງ ແລະ ຍົກຍ້ອງສະຕິປັນຍາຂອງພຣະອົງໃນການເອົາຊະນະຊາຕານ. ທຸກສິ່ງທຸກຢ່າງເທິງແຜ່ນດິນໂລກ, ໃນສະຫວັນ ແລະ ໃນທະເລໄດ້ນຳເອົາສະຫງ່າລາສີມາສູ່ພຣະອົງ, ສັນລະເສີນລິດທານຸພາບສູງສຸດຂອງພຣະອົງ, ສັນລະເສີນທຸກການກະທຳຂອງພຣະອົງ ແລະ ຮ້ອງຫານາມອັນບໍລິສຸດຂອງພຣະອົງ. ນີ້ແມ່ນຂໍ້ພິສູດການເອົາຊະນະຂອງພຣະອົງເໜືອຊາຕານ; ເປັນຫຼັກຖານຊີ້ບອກເຖິງການທຳລາຍລ້າງຊາຕານ. ສຳຄັນໄປກວ່ານັ້ນກໍຄື ມັນເປັນຫຼັກຖານແຫ່ງການຊ່ວຍມະນຸດໃຫ້ລອດພົ້ນຂອງພຣະອົງ. ການຊົງສ້າງທັງໝົດຂອງພຣະເຈົ້າໄດ້ນຳເອົາສະຫງ່າລາສີມາສູ່ພຣະອົງ, ສັນລະເສີນພຣະອົງສຳລັບການເອົາຊະນະສັດຕູຂອງພຣະອົງ ແລະ ການກັບຄືນມາດ້ວຍໄຊຊະນະ ແລະ ສັນລະເສີນພຣະອົງໃນນາມເປັນກະສັດແຫ່ງໄຊຊະນະອັນຍິ່ງໃຫຍ່. ຈຸດປະສົງຂອງພຣະອົງບໍ່ພຽງແຕ່ເພື່ອເອົາຊະນະຊາຕານ ເຊິ່ງດ້ວຍເຫດນັ້ນພາລະກິດຂອງພຣະອົງຈຶ່ງສືບຕໍ່ເປັນເວລາຫົກພັນປີ. ພຣະອົງໃຊ້ການເສຍໄຊຂອງຊາຕານເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ; ພຣະອົງໃຊ້ການປະລາໄຊຂອງຊາຕານເພື່ອເປີດເຜີຍການກະທຳຂອງພຣະອົງທັງໝົດ ແລະ ເປີດເຜີຍທຸກສະຫງ່າລາສີຂອງພຣະອົງ. ພຣະອົງຈະໄດ້ຮັບສະຫງ່າລາສີ ແລະ ຝູງທູດສະຫວັນທັງໝົດຈະເຫັນທຸກສະຫງ່າລາສີຂອງພຣະອົງ. ບັນດາຜູ້ສົ່ງຂ່າວໃນສະຫວັນ, ມະນຸດເທິງແຜ່ນດິນໂລກ ແລະ ສິ່ງຊົງສ້າງທັງໝົດເທິງແຜ່ນດິນໂລກຈະເຫັນສະຫງ່າລາສີຂອງພຣະຜູ້ສ້າງ. ນີ້ແມ່ນພາລະກິດທີ່ພຣະອົງກະທຳ. ສິ່ງຊົງສ້າງຂອງພຣະອົງໃນສະຫວັນ ແລະ ເທິງແຜ່ນດິນໂລກຈະເຫັນສະຫງ່າລາສີຂອງພຣະອົງ ແລະ ພຣະອົງຈະກັບຄືນມາຢ່າງມີໄຊຊະນະຫຼັງຈາກໄດ້ເອົາຊະນະຊາຕານຢ່າງສົມບູນ ແລະ ເຮັດໃຫ້ມະນຸດສັນລະເສີນພຣະອົງ, ດ້ວຍວິທີນີ້ ພຣະອົງຈະປະສົບຜົນສຳເລັດທັງສອງດ້ານໃນພາລະກິດຂອງພຣະອົງ. ໃນທີ່ສຸດ ມະນຸດຊາດທັງໝົດຈະຖືກປົກຄອງໂດຍພຣະອົງ ແລະ

ພຣະອົງຈະກວາດລ້າງທຸກຄົນທີ່ຂັດຂືນ ຫຼື ຕໍ່ຕ້ານ: ເວົ້າອີກຢ່າງໜຶ່ງຄື ພຣະອົງຈະກຳຈັດທຸກຄົນທີ່ເປັນຄົນຂອງຊາຕານ. ໃນປັດຈຸບັນ ເຈົ້າກຳລັງເຫັນການກະທຳຫຼາຍຢ່າງຂອງພຣະເຈົ້າ, ແຕ່ເຈົ້າກໍຍັງຂັດຂືນ, ຕໍ່ຕ້ານ ແລະ ບໍ່ຍອມເຊື່ອຟັງ; ເຈົ້າເຊື່ອງຊ້ອນຫຼາຍຢ່າງໃນຕົວເຈົ້າ ແລະ ເຮັດສິ່ງທີ່ເຈົ້າຕ້ອງການ; ເຈົ້າປະຕິບັດຕາມຕັນຫາຂອງຕົນເອງ ແລະ ສິ່ງທີ່ເຈົ້າມັກ. ນີ້ແມ່ນລ້ວນແລ້ວແຕ່ເປັນການກະບົດ ແລະ ການຕໍ່ຕ້ານ. ທຸກໆຄວາມເຊື່ອໃນພຣະເຈົ້າເພື່ອຜົນປະໂຫຍດທາງເນື້ອໜັງ ແລະ ເພື່ອຕັນຫາຂອງຕົນເອງ ພ້ອມທັງເພື່ອຄວາມມັກຂອງຕົນເອງ, ເພື່ອໂລກ ແລະ ຊາຕານແມ່ນສົກກະປົກ; ມັນແມ່ນການຂັດຂືນ ແລະ ການຕໍ່ຕ້ານໂດຍທຳມະຊາດ. ໃນທຸກມື້ນີ້ມີຄວາມເຊື່ອທີ່ແຕກຕ່າງກັນຫຼາຍປະເພດ: ບາງຄົນຊອກຫາບ່ອນລີ້ໄພ ແລະ ບາງຄົນໄຝ່ຫາເພື່ອຮັບພອນ: ບາງຄົນຕ້ອງການເຂົ້າໃຈຄວາມລຶກລັບ ແລະ ຍັງມີບາງຄົນທີ່ຄົ້ນຫາເງິນ. ສິ່ງເຫຼົ່ານີ້ແມ່ນລ້ວນແລ້ວແຕ່ເປັນຮູບແບບຂອງການຂັດຂືນ ແລະ ທັງໝົດຄືການດູໝິ່ນ! ການເວົ້າວ່າຜູ້ໜຶ່ງຂັດຂືນ ຫຼື ຕໍ່ຕ້ານບໍ່ແມ່ນໝາຍເຖິງການປະພຶດດັ່ງກ່າວບໍ? ຫຼາຍຄົນໃນທຸກມື້ນີ້ພາກັນຈົ່ມ, ຕໍ່ວ່າ ຫຼື ຕັດສິນ. ສິ່ງເຫຼົ່ານັ້ນແມ່ນລ້ວນແລ້ວແຕ່ເປັນການກະທຳຂອງຄົນຊົ່ວຮ້າຍ; ພວກເຂົາແມ່ນຕົວຢ່າງຂອງການຂັດຂືນ ແລະ ການຕໍ່ຕ້ານຂອງມະນຸດ; ຜູ້ຄົນດັ່ງກ່າວແມ່ນຖືກຄອບຄອງ ແລະ ຄອບງຳໂດຍຊາຕານ. ຜູ້ທີ່ພຣະເຈົ້າຮັບເອົາແມ່ນຜູ້ທີ່ຍອມເຊື່ອຟັງພຣະອົງທັງໝົດ; ພວກເຂົາຖືກຊາຕານເຮັດໃຫ້ເສື່ອມຊາມ ແຕ່ໄດ້ຮັບການຊ່ວຍໃຫ້ລອດ ແລະ ປົກຄອງໂດຍພາລະກິດປັດຈຸບັນຂອງພຣະອົງ, ຜູ້ທີ່ໄດ້ທົນທຸກທໍລະມານ ແລະ ໃນທີ່ສຸດຖືກຮັບເອົາໂດຍພຣະເຈົ້າ, ຜູ້ທີ່ບໍ່ໄດ້ດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານອີກຕໍ່ໄປ, ຜູ້ທີ່ໄດ້ປົດປ່ອຍຕົນເອງອອກຈາກຄວາມບໍ່ຊອບທຳ ແລະ ຜູ້ທີ່ເຕັມໃຈທີ່ຈະດຳລົງຊີວິດຢ່າງບໍລິສຸດ ເຊິ່ງຜູ້ຄົນເຫຼົ່ານີ້ເປັນຄົນທີ່ບໍລິສຸດ; ພວກເຂົາຄືຜູ້ບໍລິສຸດຢ່າງແນ່ນອນ. ຖ້າການປະຕິບັດໃນປັດຈຸບັນຂອງເຈົ້າບໍ່ກົງກັບຄວາມຕ້ອງການສ່ວນໃດໜຶ່ງຂອງພຣະເຈົ້າ, ເຈົ້າກໍຈະຖືກກຳຈັດ. ນີ້ແມ່ນສິ່ງທີ່ປະຕິເສດບໍ່ໄດ້. ທຸກຢ່າງແມ່ນອາໄສສິ່ງທີ່ເກີດຂຶ້ນໃນປັດຈຸບັນ; ເຖິງແມ່ນວ່າເຈົ້າໄດ້ຖືກກຳນົດໄວ້ແລ້ວ ແລະ ຖືກເລືອກໄວ້ແລ້ວ, ການກະທຳຂອງເຈົ້າໃນມື້ນີ້ກໍຍັງຈະກຳນົດຜົນໄດ້ຮັບຂອງເຈົ້າ. ຖ້າຕອນນີ້ເຈົ້າບໍ່ສາມາດນຳທັນ, ເຈົ້າກໍຈະຖືກກຳຈັດ. ຖ້າຕອນນີ້ເຈົ້າບໍ່ສາມາດນຳທັນ ແລ້ວຕໍ່ໄປເຈົ້າຈະນຳທັນໄດ້ແນວໃດ? ສິ່ງມະຫັດສະຈັນທີ່ຍິ່ງໃຫຍ່ໄດ້ປາກົດຢູ່ຕໍ່ໜ້າເຈົ້າ ແຕ່ເຈົ້າກໍຍັງບໍ່ເຊື່ອ. ແລ້ວຕໍ່ໄປເຈົ້າຈະເຊື່ອໃນພຣະອົງໄດ້ແນວໃດ ເມື່ອພຣະອົງໄດ້ສຳເລັດພາລະກິດຂອງພຣະອົງ ແລະ ບໍ່ເຮັດພາລະກິດດັ່ງກ່າວນັ້ນອີກ? ເຖິງຕອນນັ້ນ ມັນກໍຍິ່ງຈະເປັນໄປບໍ່ໄດ້ສຳລັບເຈົ້າທີ່ຈະປະຕິບັດຕາມພຣະອົງ! ຫຼັງຈາກນັ້ນ ພຣະເຈົ້າຈະອີງໃສ່ທັດສະນະຄະຕິ, ຄວາມຮູ້ຂອງເຈົ້າທີ່ມີຕໍ່ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ປະສົບການຂອງເຈົ້າ ເພື່ອກຳນົດວ່າເຈົ້າເປັນຄົນບາບ ຫຼື ຄົນຊອບທຳ ຫຼື ເພື່ອກຳນົດວ່າເຈົ້າເປັນຈະຖືກເຮັດໃຫ້ສົມບູນ ຫຼື ຖືກກຳຈັດ. ເຈົ້າຕ້ອງເຫັນຢ່າງຊັດເຈນໃນຕອນນີ້. ພຣະວິນຍານບໍລິສຸດເຮັດພາລະກິດຢ່າງແທ້ຈິງ: ພຣະອົງກຳນົດຜົນໄດ້ຮັບຂອງເຈົ້າ ໂດຍອີງຕາມການປະຕິບັດຂອງເຈົ້າໃນມື້ນີ້. ໃຜກ່າວພຣະທຳໃນມື້ນີ້? ໃຜເຮັດພາລະກິດໃນມື້ນີ້? ໃຜຕັດສິນວ່າເຈົ້າຈະຖືກກຳຈັດໃນມື້ນີ້? ໃຜຕັດສິນຈະເຮັດໃຫ້ເຈົ້າສົມບູນ? ນີ້ບໍ່ແມ່ນສິ່ງທີ່ເຮົາເຮັດເອງບໍ? ເຮົາເປັນຜູ້ທີ່

ກ່າວພຣະທຳເຫຼົ່ານີ້; ເຮົາເປັນຜູ້ທີ່ດຳເນີນພາລະກິດນີ້. ການສາບແຊ່ງ, ການຂ້ຽນຕີ ແລະ ການພິພາກສາຜູ້ຄົນແມ່ນລ້ວນແລ້ວແຕ່ເປັນສ່ວນໜຶ່ງຂອງພາລະກິດຂອງເຮົາ. ສຸດທ້າຍ, ມັນກໍຂຶ້ນຢູ່ກັບເຮົາທີ່ຈະກຳຈັດເຈົ້າ. ສິ່ງທັງໝົດເຫຼົ່ານີ້ແມ່ນທຸລະຂອງເຮົາເອງ! ການເຮັດໃຫ້ເຈົ້າສົມບູນແມ່ນທຸລະຂອງເຮົາເອງ ແລະ ການເຮັດໃຫ້ເຈົ້າໄດ້ຮັບພອນກໍແມ່ນທຸລະຂອງເຮົາເອງເຊັ່ນກັນ. ທັງໝົດນີ້ແມ່ນພາລະກິດທີ່ເຮົາເຮັດ. ຜົນໄດ້ຮັບຂອງເຈົ້າບໍ່ໄດ້ຖືກກຳນົດໄວ້ໂດຍພຣະເຢໂຮວາ; ມັນຖືກກຳນົດໂດຍພຣະເຈົ້າຂອງຍຸກນີ້. ມັນຖືກກຳນົດໃນປັດຈຸບັນ; ມັນບໍ່ໄດ້ຖືກກຳນົດໄວ້ແຕ່ດົນກ່ອນທີ່ໂລກຈະຖືກສ້າງຂຶ້ນ. ບາງຄົນທີ່ບໍ່ມີເຫດຜົນຈະເວົ້າວ່າ: “ບາງເທື່ອສາຍຕາຂອງພຣະອົງອາດຈະຜິດປົກກະຕິ ແລະ ພຣະອົງບໍ່ເຫັນຂ້ານ້ອຍຕາມທີ່ພຣະອົງຄວນເຫັນ. ສຸດທ້າຍ ພຣະອົງກໍຈະເຫັນແຕ່ສິ່ງທີ່ພຣະວິນຍານເປີດເຜີຍ!” ໃນເບື້ອງຕົ້ນ ພຣະເຢຊູໄດ້ເລືອກເອົາຢູດາເປັນສາວົກຂອງພຣະອົງ. ຜູ້ຄົນຖາມວ່າ: “ພຣະອົງເລືອກສາວົກຜູ້ທີ່ຈະທໍລະຍົດພຣະອົງໄດ້ແນວໃດ?” ໃນຕອນທຳອິດ ຢູດາບໍ່ມີຈຸດປະສົງທີ່ຈະທໍລະຍົດພຣະເຢຊູ; ສິ່ງນີ້ໄດ້ເກີດຂຶ້ນໃນພາຍຫຼັງ. ໃນເວລານັ້ນ, ພຣະເຢຊູໄດ້ເບິ່ງຢູດາແບບຂ້ອນຂ້າງພໍໃຈ; ພຣະອົງເຮັດໃຫ້ຢູດາຕິດຕາມພຣະອົງ ແລະ ເຮັດໃຫ້ລາວຮັບຜິດຊອບຕໍ່ເລື່ອງການເງິນຂອງພວກເຂົາ. ຖ້າພຣະອົງຮູ້ວ່າຢູດາຈະສໍ້ໂກງເງິນ, ພຣະອົງກໍຈະບໍ່ປ່ອຍໃຫ້ລາວຮັບຜິດຊອບເລື່ອງດັ່ງກ່າວ. ສາມາດເວົ້າໄດ້ວ່າ ພຣະເຢຊູບໍ່ໄດ້ຮູ້ແຕ່ຕົ້ນວ່າ ຊາຍຄົນນີ້ເປັນຄົນສໍ້ໂກງ ແລະ ຫຼອກລວງ ຫຼື ລາວຈະສໍ້ໂກງອ້າຍເອື້ອຍນ້ອງຂອງລາວ. ຫຼັງຈາກນັ້ນ, ພາຍຫຼັງທີ່ຢູດາໄດ້ຕິດຕາມພຣະເຢຊູເປັນເວລາພໍສົມຄວນ, ພຣະເຢຊູຈຶ່ງໄດ້ເຫັນລາວຫຼອກລວງອ້າຍເອື້ອຍນ້ອງຂອງລາວ ແລະ ຫຼອກລວງພຣະເຈົ້າ. ຜູ້ຄົນຍັງໄດ້ຄົ້ນພົບວ່າ ຢູດາມັກໃຊ້ເງິນຈາກຖົງເງິນເປັນປະຈຳ ແລະ ພວກເຂົາກໍໄດ້ບອກພຣະເຢຊູກ່ຽວກັບເລື່ອງນັ້ນ. ດັ່ງນັ້ນ ພຣະເຢຊູຈຶ່ງໄດ້ຮູ້ທຸກສິ່ງທີ່ເກີດຂຶ້ນ. ເນື່ອງຈາກວ່າ ພຣະເຢຊູກຳລັງປະຕິບັດພາລະກິດຂອງການຖືກຄຶງ ແລະ ຕ້ອງການໃຫ້ມີຜູ້ໃດຜູ້ໜຶ່ງທໍລະຍົດຕໍ່ພຣະອົງ ແລະ ເນື່ອງຈາກວ່າ ຢູດາບັງເອີນເປັນຜູ້ທີ່ເໝາະສົມກັບບົດບາດນີ້, ພຣະເຢຊູເລີຍກ່າວວ່າ: “ຈະມີຄົນໜຶ່ງໃນບັນດາພວກເຮົາທີ່ຈະທໍລະຍົດເຮົາ. ບຸດຂອງມະນຸດຈະໃຊ້ການທໍລະຍົດນີ້ເພື່ອການຖືກຄຶງ ແລະ ຫຼັງຈາກສາມມື້ກໍຈະຟື້ນຄືນຊີບ”. ໃນເວລານັ້ນ, ແທ້ຈິງແລ້ວ ພຣະເຢຊູບໍ່ໄດ້ເລືອກຢູດາເພື່ອໃຫ້ລາວທໍລະຍົດຕໍ່ພຣະອົງ; ແຕ່ກົງກັນຂ້າມ, ພຣະອົງປາດຖະໜາວ່າຢູດາຈະເປັນສາວົກທີ່ຊື່ສັດ. ແຕ່ຢ່າງບໍ່ຄາດຄິດ, ຢູດາໄດ້ກາຍເປັນຄົນຊົ່ວຊ້າ ແລະ ໂລບມາກທີ່ທໍລະຍົດຕໍ່ພຣະຜູ້ເປັນເຈົ້າ, ດັ່ງນັ້ນພຣະອົງຈຶ່ງນຳໃຊ້ສະຖານະການນີ້ເລືອກເອົາຢູດາເພື່ອພາລະກິດນີ້. ຖ້າສາວົກທັງສິບສອງຄົນຂອງພຣະເຢຊູມີຄວາມຊື່ສັດ ແລະ ບໍ່ມີຄົນໃດທີ່ຄືກັນກັບຢູດາຢູ່ໃນກຸ່ມຂອງພວກເຂົາ, ບຸກຄົນທີ່ຈະທໍລະຍົດພຣະເຢຊູກໍຈະເປັນຄົນອື່ນທີ່ບໍ່ແມ່ນສາວົກ. ຢ່າງໃດກໍຕາມ, ໃນເວລານັ້ນ ມັນບັງເອີນວ່າ ມີຄົນໜຶ່ງໃນບັນດາສາວົກທີ່ຮັບສິນບົນ ນັ້ນກໍຄືຢູດາ. ດ້ວຍເຫດນັ້ນ ພຣະເຢຊູຈຶ່ງໃຊ້ຜູ້ຊາຍຄົນນີ້ເພື່ອເຮັດພາລະກິດຂອງພຣະອົງໃຫ້ສຳເລັດ. ມັນຊ່າງງ່າຍດາຍແທ້ໆ! ພຣະເຢຊູບໍ່ໄດ້ກຳນົດພາລະກິດຂອງພຣະອົງໄວ້ລ່ວງໜ້າຕັ້ງແຕ່ເລີ່ມຕົ້ນ; ພຣະອົງພຽງແຕ່ຕັດສິນໃຈເມື່ອສິ່ງຕ່າງໆໄດ້ພັດທະນາໄປສູ່ຂັ້ນຕອນໃດໜຶ່ງ. ນີ້ແມ່ນການຕັດສິນໃຈຂອງພຣະເຢຊູເຊິ່ງເວົ້າໄດ້ວ່າ ນັ້ນຄືການຕັດສິນໃຈຂອງພຣະວິນຍານຂອງພຣະເຈົ້າເອງ. ທຳອິດ ພຣະເຢຊູເປັນຜູ້

ເລືອກຢູດາ; ຕໍ່ມາ ເມື່ອຢູດາໄດ້ທໍລະຍົດພຣະເຢຊູ ນີ້ແມ່ນການກະທຳຂອງພຣະວິນຍານບໍລິສຸດ ເພື່ອຈຸດປະສົງຂອງພຣະອົງເອງ; ມັນແມ່ນພາລະກິດຂອງພຣະວິນຍານບໍລິສຸດທີ່ດຳເນີນໃນເວລານັ້ນ. ເມື່ອພຣະເຢຊູເລືອກຢູດາ, ພຣະອົງບໍ່ຮູ້ເລີຍວ່າ ລາວຈະທໍລະຍົດຕໍ່ພຣະອົງ. ພຣະອົງພຽງແຕ່ຮູ້ວ່າ ຜູ້ຊາຍຄົນນັ້ນຄືຢູດາ ອິສະກາຣີອົດ. ຜົນໄດ້ຮັບຂອງພວກເຈົ້າຈະຖືກກຳນົດຕາມລະດັບຂອງຄວາມເຊື່ອຟັງຂອງພວກເຈົ້າໃນມື້ນີ້ເຊັ່ນກັນ ແລະ ອີງຕາມລະດັບການເຕີບໂຕຂອງຊີວິດຂອງພວກເຈົ້າ ແລະ ບໍ່ໄດ້ອີງຕາມຄວາມຄິດຂອງມະນຸດທີ່ວ່າ ຜົນໄດ້ຮັບຂອງເຈົ້າແມ່ນຖືກກຳນົດລ່ວງໜ້າຕັ້ງແຕ່ຕອນສ້າງໂລກແລ້ວ. ເຈົ້າຕ້ອງຮູ້ສິ່ງເຫຼົ່ານີ້ຢ່າງຊັດເຈນ. ພາລະກິດທັງໝົດເຫຼົ່ານີ້ບໍ່ໄດ້ຖືກປະຕິບັດໂດຍອີງຕາມຈິນຕະນາການຂອງເຈົ້າ.

# ວ່າດ້ວຍເລື່ອງຕໍາແໜ່ງ ແລະ ຕົວຕົນ

ຖ້າເຈົ້າປາຖະໜາທີ່ຈະເໝາະສົມສຳລັບການຖືກໃຊ້ໂດຍພຣະເຈົ້າ, ເຈົ້າຕ້ອງຮູ້ຈັກພາລະກິດຂອງພຣະເຈົ້າ, ເຈົ້າຕ້ອງຮູ້ຈັກພາລະກິດທີ່ພຣະອົງໄດ້ປະຕິບັດກ່ອນໜ້ານີ້ (ໃນພຣະສັນຍາໃໝ່ ແລະ ເດີມ), ແລະ ຍິ່ງໄປກວ່ານັ້ນ ເຈົ້າຕ້ອງຮູ້ຈັກພາລະກິດຂອງພຣະອົງໃນປັດຈຸບັນ; ນັ້ນໝາຍຄວາມວ່າ ເຈົ້າຕ້ອງຮູ້ຈັກສາມຂັ້ນຕອນຂອງພາລະກິດຂອງພຣະເຈົ້າທີ່ປະຕິບັດມາຫຼາຍກວ່າ 6.000 ປີ. ຖ້າເຈົ້າຖືກຮ້ອງຂໍໃຫ້ເຜີຍແຜ່ຂ່າວປະເສີດ, ແລ້ວເຈົ້າກໍຈະບໍ່ສາມາດເຮັດໄດ້ ຫາກບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ. ບາງຄົນອາດຖາມເຈົ້າກ່ຽວກັບສິ່ງທີ່ພຣະເຈົ້າຂອງພວກເຈົ້າໄດ້ເວົ້າໄວ້ກ່ຽວກັບພຣະຄຳພີ, ພຣະສັນຍາເດີມ ແລະ ພາລະກິດ ແລະ ພຣະທຳຂອງພຣະເຢຊູໃນເວລານັ້ນ. ຖ້າເຈົ້າບໍ່ສາມາດເວົ້າເຖິງເລື່ອງລາວເບື້ອງຫຼັງຂອງພຣະຄຳພີ, ແລ້ວພວກເຂົາກໍຈະບໍ່ເຊື່ອ. ໃນເວລານັ້ນ, ພຣະເຢຊູເວົ້າຫຼາຍຢ່າງກັບສາວົກຂອງພຣະອົງກ່ຽວກັບພຣະສັນຍາເດີມ. ທຸກສິ່ງທີ່ພວກເຂົາອ່ານແມ່ນມາຈາກພຣະສັນຍາເດີມ; ພຣະສັນຍາໃໝ່ພຽງແຕ່ຫາກໍ່ຂຽນຂຶ້ນສອງສາມທົດສະວັດຫຼັງຈາກທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນ. ເພື່ອເຜີຍແຜ່ຂ່າວປະເສີດ, ພວກເຈົ້າຄວນເຂົ້າໃຈຄວາມຈິງສ່ວນໃນຂອງພຣະຄຳພີເປັນຫຼັກ ແລະ ພາລະກິດຂອງພຣະເຈົ້າທີ່ຢູ່ໃນອິດສະຣາເອນ ເຊິ່ງນັ້ນກໍຄືພາລະກິດທີ່ພຣະເຢໂຮວາໄດ້ປະຕິບັດ ແລະ ພວກເຈົ້າກໍຕ້ອງເຂົ້າໃຈເຖິງພາລະກິດທີ່ພຣະເຢຊູປະຕິບັດເຊັ່ນກັນ. ສິ່ງເຫຼົ່ານີ້ແມ່ນບັນຫາທີ່ທຸກຄົນເປັນຫ່ວງທີ່ສຸດ ແລະ ເລື່ອງລາວເບື້ອງຫຼັງຂອງສາມຂັ້ນຕອນຂອງພາລະກິດຄືສິ່ງທີ່ພວກເຂົາບໍ່ເຄີຍໄດ້ຍິນ. ເມື່ອເຜີຍແຜ່ຂ່າວປະເສີດ, ກ່ອນອື່ນ ໃຫ້ປະວາງການເວົ້າເຖິງພາລະກິດຂອງພຣະວິນຍານບໍລິສຸດໃນປັດຈຸບັນ. ຂັ້ນຕອນນີ້ຂອງພາລະກິດແມ່ນຢູ່ນອກເໜືອການຢັ່ງເຖິງຂອງພວກເຂົາ, ເພາະສິ່ງທີ່ພວກເຂົາສະແຫວງຫາແມ່ນສິ່ງທີ່ສູງສົ່ງທີ່ສຸດໃນບັນດາສິ່ງທັງປວງ: ຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ຄວາມຮູ້ກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ບໍ່ມີຫຍັງທີ່ສູງສົ່ງໄປກວ່າສອງສິ່ງເຫຼົ່ານີ້. ຖ້າພວກເຈົ້າເວົ້າກ່ຽວກັບສິ່ງທີ່ສູງສົ່ງກ່ອນ, ມັນກໍຈະຫຼາຍເກີນໄປສຳລັບພວກເຂົາ ຍ້ອນບໍ່ມີຜູ້ໃດໄດ້ຜະເຊີນກັບພາລະກິດດັ່ງກ່າວຂອງພຣະວິນຍານບໍລິສຸດ; ມັນບໍ່ເຄີຍມີມາກ່ອນ ແລະ ມັນບໍ່ໄດ້ງ່າຍສຳລັບມະນຸດທີ່ຈະຍອມຮັບໄດ້. ປະສົບການຂອງພວກເຂົາແມ່ນສິ່ງເດີມໆຈາກອະດີດພ້ອມກັບພາລະກິດບາງຢ່າງຂອງພຣະວິນຍານບໍລິສຸດ. ສິ່ງທີ່ພວກເຂົາຜະເຊີນບໍ່ແມ່ນພາລະກິດຂອງພຣະວິນຍານບໍລິສຸດໃນປັດຈຸບັນ ຫຼື ຄວາມປະສົງຂອງພຣະເຈົ້າໃນປັດຈຸບັນ. ພວກເຂົາຍັງເຮັດຕາມການປະຕິບັດທີ່ເກົ່າແກ່ ໂດຍບໍ່ມີແສງສະຫວ່າງໃໝ່ ແລະ ສິ່ງໃໝ່.

ໃນຍຸກຂອງພຣະເຢຊູ, ພຣະວິນຍານບໍລິສຸດປະຕິບັດພາລະກິດໃນພຣະເຢຊູເປັນຫຼັກ ໃນຂະນະທີ່ຄົນທີ່ຮັບໃຊ້ພຣະເຢໂຮວາ ຜູ້ເຊິ່ງນຸ່ງເສື້ອຄຸມຂອງປະໂລຫິດໃນພຣະວິຫານ ແມ່ນເຮັດດ້ວຍຄວາມຈົງຮັກພັກດີທີ່ສຸດ. ພວກເຂົາຍັງມີພາລະກິດຂອງພຣະວິນຍານບໍລິສຸດ, ແຕ່ບໍ່ສາມາດເຂົ້າໃຈຄວາມປະສົງໃນປັດຈຸບັນຂອງພຣະເຈົ້າໄດ້ ແລະ ພຽງແຕ່ຍັງຊື່ສັດຕໍ່ພຣະເຢໂຮວາຕາມການປະຕິບັດທີ່ເກົ່າແກ່ ແລະ ບໍ່ມີການນຳພາໃໝ່. ພຣະເຢຊູມາ ແລະ ນຳມາເຊິ່ງພາລະກິດໃໝ່. ແຕ່ຄົນເຫຼົ່ານັ້ນທີ່ຮັບໃຊ້ໃນ

ພຣະວິຫານກໍບໍ່ໄດ້ມີການນຳພາໃໝ່ ຫຼື ພວກເຂົາໄດ້ມີພາລະກິດໃໝ່. ເມື່ອຮັບໃຊ້ໃນພຣະວິຫານ ພວກເຂົາພຽງສາມາດແຕ່ສິ່ງເສີມການປະຕິບັດທີ່ເກົ່າແກ່; ແລະ ຖ້າຫາກບໍ່ອອກຈາກພຣະວິຫານ, ພວກເຂົາກໍຈະບໍ່ສາມາດມີທາງເຂົ້າໃໝ່ໃດໆ. ພາລະກິດໃໝ່ແມ່ນຖືກນຳມາໂດຍພຣະເຢຊູ ແລະ ພຣະເຢຊູບໍ່ໄດ້ເຂົ້າໄປໃນພຣະວິຫານເພື່ອປະຕິບັດພາລະກິດຂອງພຣະອົງ. ພຣະອົງພຽງແຕ່ປະຕິບັດພາລະກິດຂອງພຣະອົງນອກພຣະວິຫານ, ຍ້ອນຂອບເຂດແຫ່ງພາລະກິດຂອງພຣະເຈົ້າໄດ້ປ່ຽນແປງຕັ້ງແຕ່ດົນແລ້ວ. ພຣະອົງບໍ່ໄດ້ປະຕິບັດພາລະກິດພາຍໃນພຣະວິຫານ ແລະ ເມື່ອມະນຸດຮັບໃຊ້ພຣະເຈົ້າໃນທີ່ນັ້ນ ມັນກໍເປັນພຽງການຮັກສາສິ່ງຕ່າງໆຕາມທີ່ພວກມັນເຄີຍເປັນ ແລະ ບໍ່ສາມາດເຮັດໃຫ້ເກີດພາລະກິດໃໝ່. ໃນທຳນອງດຽວກັນ, ຜູ້ຄົນຂອງສາສະໜາໃນປັດຈຸບັນຍັງນະມັດສະການພຣະຄຳພີ. ຖ້າເຈົ້າເຜີຍແຜ່ຂ່າວປະເສີດໃຫ້ພວກເຂົາ, ພວກເຂົາກໍຈະໂຍນລາຍລະອຽດເລັກນ້ອຍກ່ຽວກັບຂໍ້ພຣະທຳໃນພຣະຄຳພີໃສ່ເຈົ້າ, ແລະພວກເຂົາກໍຈະຊອກຫາຫຼັກຖານມາອ້າງອີງ ເຮັດໃຫ້ເຈົ້າຕົກສະເງີ້ຈົນເວົ້າບໍ່ອອກ; ແລ້ວພວກເຂົາກໍຈະຕີລາຄາເຈົ້າ ແລະ ຄິດວ່າເຈົ້າໂງ່ໃນຄວາມເຊື່ອຂອງເຈົ້າ. ພວກເຂົາຈະເວົ້າວ່າ: "ພວກທ່ານບໍ່ຮູ້ຈັກແມ່ນແຕ່ພຣະຄຳພີ ແລະ ພຣະທຳຂອງພຣະເຈົ້າ, ແລ້ວພວກທ່ານຈະສາມາດເວົ້າໄດ້ແນວໃດວ່າພວກທ່ານເຊື່ອໃນພຣະເຈົ້າ?" ແລ້ວພວກເຂົາກໍຈະດູຖູກເຈົ້າ ແລະ ເວົ້າອີກວ່າ: "ຍ້ອນຜູ້ທີ່ພວກທ່ານເຊື່ອແມ່ນພຣະເຈົ້າ, ແລ້ວເປັນຫຍັງພຣະອົງຈຶ່ງບໍ່ບອກພວກທ່ານກ່ຽວກັບພຣະສັນຍາເດີມ ແລະ ໃໝ່? ຍ້ອນພຣະອົງໄດ້ນຳສະຫງ່າລາສີຂອງພຣະອົງຈາກອິດສະຣາເອນໄປສູ່ຕະເວັນອອກ, ເປັນຫຍັງພຣະອົງຈຶ່ງບໍ່ຮູ້ຈັກພາລະກິດທີ່ໄດ້ປະຕິບັດໃນອິດສະຣາເອນ? ເປັນຫຍັງພຣະອົງຈຶ່ງບໍ່ຮູ້ຈັກພາລະກິດຂອງພຣະເຢຊູ? ຖ້າພວກເຈົ້າບໍ່ຮູ້ຈັກ, ແລ້ວສິ່ງນັ້ນພິສູດໃຫ້ເຫັນວ່າພວກເຈົ້າບໍ່ໄດ້ຮັບການເປີດເຜີຍ; ຍ້ອນພຣະອົງເປັນການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຢຊູ, ພຣະອົງຈະບໍ່ຮູ້ຈັກສິ່ງເຫຼົ່ານີ້ໄດ້ແນວໃດ? ພຣະເຢຊູຮູ້ຈັກພາລະກິດທີ່ພຣະເຢໂຮວາປະຕິບັດ; ແລ້ວພຣະອົງຈະບໍ່ຮູ້ໄດ້ແນວໃດ?" ເມື່ອເວລານັ້ນມາເຖິງ, ພວກເຂົາທຸກຄົນຈະຖາມເຈົ້າດ້ວຍຄຳຖາມດັ່ງກ່າວ. ຫົວຂອງພວກເຂົາແມ່ນເຕັມໄປດ້ວຍສິ່ງດັ່ງກ່າວ; ພວກເຂົາຈະບໍ່ຖາມໄດ້ແນວໃດ? ບັນດາພວກເຈົ້າຜູ້ທີ່ຢູ່ພາຍໃນກະແສນີ້ບໍ່ໄດ້ສົນໃຈກັບພຣະຄຳພີ, ຍ້ອນພວກເຈົ້ານຳທັນພາລະກິດແຕ່ລະຂັ້ນຕອນທີ່ພຣະເຈົ້າປະຕິບັດໃນປັດຈຸບັນ, ພວກເຈົ້າໄດ້ເຫັນເຖິງພາລະກິດແຕ່ລະຂັ້ນຕອນນີ້ດ້ວຍຕາຂອງພວກເຈົ້າເອງ, ພວກເຈົ້າໄດ້ເບິ່ງເຫັນສາມຂັ້ນຕອນຂອງພາລະກິດຢ່າງຊັດເຈນ ແລະ ສະນັ້ນ ພວກເຈົ້າກໍໄດ້ວາງພຣະຄຳພີລົງ ແລະ ເຊົາສຶກສາກ່ຽວກັບມັນ. ແຕ່ພວກເຂົາບໍ່ສາມາດສຶກສາມັນໄດ້ ຍ້ອນພວກເຂົາບໍ່ມີຄວາມຮູ້ກ່ຽວກັບທຸກຂັ້ນຕອນຂອງພາລະກິດນີ້. ບາງຄົນຖາມວ່າ: "ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງພາລະກິດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດ ແລະ ພາລະກິດທີ່ຜູ້ປະກາດພຣະທຳ ແລະ ສາວົກທີ່ຢູ່ໃນອະດີດໄດ້ປະຕິບັດ? ເດວິດກໍຖືກເອີ້ນວ່າພຣະຜູ້ເປັນເຈົ້າເຊັ່ນກັນ ແລະ ພຣະເຢຊູກໍຖືກເອີ້ນຄືກັນ; ເຖິງແມ່ນພາລະກິດທີ່ພວກເຂົາປະຕິບັດແມ່ນແຕກຕ່າງກັນ, ພວກເຂົາກໍຖືກເອີ້ນແບບດຽວກັນ. ຈົ່ງບອກຂ້ານ້ອຍເບິ່ງ, ເປັນຫຍັງຕົວຕົນຂອງພວກເຂົາຈຶ່ງບໍ່ຄືກັນ? ສິ່ງທີ່ໂຢຮັນໄດ້ເຫັນກໍຄືນິມິດ ເຊິ່ງມາຈາກພຣະວິນຍານບໍລິສຸດ ແລະ ເພິ່ນສາມາດເວົ້າເຖິງພຣະທຳທີ່

ພຣະວິນຍານບໍລິສຸດເຈດຕະນາທີ່ຈະເວົ້າ; ເປັນຫຍັງຕົວຕົນຂອງໂຢຮັນຈຶ່ງແຕກຕ່າງຈາກຕົວຕົນຂອງພຣະເຢຊູ?" ພຣະທຳທີ່ພຣະເຢຊູກ່າວແມ່ນສາມາດເປັນຕົວແທນໃຫ້ກັບພຣະເຈົ້າໄດ້ຢ່າງສົມບູນ ແລະ ເປັນຕົວແທນໃຫ້ກັບພາລະກິດຂອງພຣະເຈົ້າຢ່າງສົມບູນ. ສິ່ງທີ່ໂຢຮັນເຫັນແມ່ນນິມິດ ແລະ ເພິ່ນກໍບໍ່ສາມາດເປັນຕົວແທນໃຫ້ກັບພາລະກິດຂອງພຣະເຈົ້າໄດ້ຢ່າງສົມບູນ. ເປັນຫຍັງເມື່ອໂຢຮັນ, ເປໂຕ ແລະ ໂປໂລກ່າວຄຳເວົ້າຫຼາຍຄຳ ດັ່ງທີ່ພຣະເຢຊູກ່າວ ແຕ່ພວກເຂົາກໍບໍ່ມີຕົວຕົນແບບດຽວກັບພຣະເຢຊູ? ຫຼັກໆແມ່ນເປັນຍ້ອນພາລະກິດທີ່ພວກເຂົາປະຕິບັດນັ້ນແຕກຕ່າງກັນ. ພຣະເຢຊູເປັນຕົວແທນໃຫ້ກັບພຣະວິນຍານຂອງພຣະເຈົ້າ ແລະ ເປັນພຣະວິນຍານຂອງພຣະເຈົ້າທີ່ປະຕິບັດພາລະກິດໂດຍກົງ. ພຣະອົງປະຕິບັດພາລະກິດຂອງຍຸກໃໝ່ ເຊິ່ງເປັນພາລະກິດທີ່ບໍ່ມີໃຜເຄີຍປະຕິບັດມາກ່ອນ. ພຣະອົງເປີດຫົນທາງໃໝ່, ພຣະອົງເປັນຕົວແທນໃຫ້ກັບພຣະເຢໂຮວາ ແລະ ພຣະອົງເປັນຕົວແທນໃຫ້ກັບພຣະເຈົ້າເອງ, ໃນຂະນະທີ່ເປໂຕ, ໂປໂລ ແລະ ເດວິດ, ບໍ່ວ່າພວກເຂົາຈະຖືກເອີ້ນວ່າແນວໃດກໍຕາມ ພວກເຂົາພຽງແຕ່ເປັນຕົວແທນໃຫ້ກັບສິ່ງມີຊີວິດຂອງພຣະເຈົ້າ ແລະ ຖືກພຣະເຢຊູ ຫຼື ພຣະເຢໂຮວາສົ່ງມາ. ສະນັ້ນ ບໍ່ວ່າພາລະກິດທີ່ພວກເຂົາປະຕິບັດນັ້ນມີຫຼາຍສໍ່າໃດກໍຕາມ, ບໍ່ວ່າສິ່ງອັດສະຈັນທີ່ພວກເຂົາປະຕິບັດນັ້ນຍິ່ງໃຫຍ່ສໍ່າໃດກໍຕາມ, ພວກເຂົາກໍຍັງເປັນພຽງສິ່ງຖືກສ້າງຂອງພຣະເຈົ້າ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະວິນຍານຂອງພຣະເຈົ້າໄດ້. ພວກເຂົາປະຕິບັດພາລະກິດໃນນາມຂອງພຣະເຈົ້າ ຫຼື ປະຕິບັດພາລະກິດຫຼັງຈາກທີ່ພຣະເຈົ້າໄດ້ສົ່ງມາ; ຍິ່ງໄປກວ່ານັ້ນພວກເຂົາປະຕິບັດພາລະກິດໃນຍຸກທີ່ພຣະເຢຊູ ຫຼື ພຣະເຢໂຮວາເປັນຜູ້ເລີ່ມຕົ້ນ ແລະ ພວກເຂົາບໍ່ໄດ້ປະຕິບັດພາລະກິດອື່ນເລີຍ. ໃນທີ່ສຸດແລ້ວ ພວກເຂົາກໍເປັນພຽງສິ່ງຖືກສ້າງຂອງພຣະເຈົ້າເທົ່ານັ້ນ. ໃນພຣະສັນຍາເດີມ, ຜູ້ປະກາດພຣະທຳກ່າວຄຳພະຍາກອນ ຫຼື ຂຽນໜັງສືແຫ່ງການທຳນາຍ. ບໍ່ມີໃຜເວົ້າວ່າພວກເຂົາເປັນພຣະເຈົ້າ, ແຕ່ທັນທີທີ່ພຣະເຢຊູເລີ່ມປະຕິບັດພາລະກິດ, ພຣະວິນຍານຂອງພຣະເຈົ້າກໍເປັນພະຍານໃຫ້ກັບພຣະອົງໃນຖານະພຣະເຈົ້າ. ເປັນຫຍັງຈຶ່ງເປັນແບບນັ້ນ? ໃນຈຸດນີ້ ເຈົ້າຄວນຮູ້ໄດ້ແລ້ວ! ກ່ອນໜ້ານີ້, ອັກຄະສາວົກ ແລະ ຜູ້ປະກາດພຣະທຳຂຽນຈົດໝາຍຫຼາກຫຼາຍສະບັບ ແລະ ກ່າວຄຳທຳນາຍຫຼາຍຢ່າງ. ໃນເວລາຕໍ່ມາ, ຜູ້ຄົນເລືອກຈົດໝາຍບາງສະບັບເພື່ອບັນທຶກເຂົ້າໃນພຣະຄຳພີ ແລະ ບາງສະບັບກໍສູນເສຍໄປ. ຍ້ອນມີຄົນທີ່ເວົ້າທຸກສິ່ງທີ່ພວກເຂົາເວົ້າແມ່ນມາຈາກພຣະວິນຍານບໍລິສຸດ, ເປັນຫຍັງຈົດໝາຍບາງສະບັບຈຶ່ງຖືວ່າດີ ແລະ ບາງສະບັບຖືວ່າບໍ່ດີ? ແລ້ວເປັນຫຍັງບາງສະບັບຈຶ່ງຖືກເລືອກ ແລະ ບາງສະບັບບໍ່ຖືກເລືອກ? ຖ້າຈົດໝາຍເຫຼົ່ານັ້ນແມ່ນພຣະທຳທີ່ພຣະວິນຍານບໍລິສຸດໄດ້ກ່າວໄວ້ແທ້ໆ, ມັນຈຳເປັນບໍທີ່ຈະໃຫ້ຜູ້ຄົນຄັດເລືອກພວກມັນ? ເປັນຫຍັງພຣະທຳທີ່ພຣະເຢຊູກ່າວ ແລະ ພາລະກິດທີ່ພຣະອົງປະຕິບັດຈຶ່ງແຕກຕ່າງກັນໃນພຣະກິດຕິຄຸນທັງສີ່? ນີ້ບໍ່ແມ່ນຂໍ້ຜິດພາດຂອງຄົນທີ່ບັນທຶກພວກມັນບໍ? ບາງຄົນຈະຖາມວ່າ "ຍ້ອນຈົດໝາຍຖືກຂຽນຂຶ້ນໂດຍໂປໂລ ແລະ ນັກປະພັນຄົນອື່ນໆໃນພຣະສັນຍາໃໝ່ ແລະ ບາງສ່ວນຂອງພາລະກິດທີ່ພວກເຂົາປະຕິບັດກໍເກີດຈາກຄວາມປະສົງຂອງມະນຸດ ແລະ ເຈືອປົນກັບແນວຄິດຂອງມະນຸດ, ແລ້ວມັນຈະບໍ່ມີຄວາມບໍ່ບໍລິສຸດຂອງມະນຸດໃນພຣະທຳທີ່ພຣະອົງ (ພຣະເຈົ້າ) ກ່າວໃນປັດຈຸບັນບໍ? ພຣະທຳເຫຼົ່ານັ້ນປາສະຈາກ

ແນວຄິດຂອງມະນຸດແທ້ບໍ?" ຂັ້ນຕອນນີ້ຂອງພາລະກິດທີ່ພຣະເຈົ້າປະຕິບັດແມ່ນແຕກຕ່າງຈາກຂັ້ນຕອນທີ່ໂປໂລ ແລະ ອັກຄະສາວົກ ແລະ ຜູ້ປະກາດພຣະທຳຄົນອື່ນໆປະຕິບັດທັງສິ້ນ. ບໍ່ແມ່ນແຕ່ວ່າມີຄວາມແຕກຕ່າງໃນຕົວຕົນ, ແຕ່ຫຼັກໆແລ້ວແມ່ນມີຄວາມແຕກຕ່າງໃນພາລະກິດທີ່ຖືກປະຕິບັດ. ຫຼັງຈາກທີ່ໂປໂລຖືກຕີໃຫ້ລົ້ມ ແລະ ລົ້ມລົງຕໍ່ໜ້າພຣະຜູ້ເປັນເຈົ້າ, ເພິ່ນກໍຖືກນຳພາໂດຍພຣະວິນຍານບໍລິສຸດເພື່ອປະຕິບັດພາລະກິດ ແລະ ເພິ່ນກາຍເປັນຄົນທີ່ຖືກສົ່ງມາ. ສະນັ້ນ ເພິ່ນຈຶ່ງຂຽນຈົດໝາຍໄປຫາຄຣິສຕະຈັກ ແລະ ຈົດໝາຍເຫຼົ່ານັ້ນກໍລ້ວນແລ້ວແຕ່ອີງຕາມຄຳສັ່ງສອນຂອງພຣະເຢຊູ. ໂປໂລຖືກສົ່ງໂດຍພຣະຜູ້ເປັນເຈົ້າໃຫ້ເຮັດພາລະກິດໃນນາມຂອງພຣະເຢຊູເຈົ້າ, ແຕ່ເມື່ອພຣະເຈົ້າເອງສະເດັດມາ, ພຣະອົງບໍ່ໄດ້ປະຕິບັດພາລະກິດໂດຍໃຊ້ຊື່ອື່ນໃດ ແລະ ບໍ່ໄດ້ເປັນຕົວແທນໃຫ້ກັບຜູ້ໃດ ນອກຈາກພຣະວິນຍານຂອງພຣະເຈົ້າທີ່ຢູ່ໃນພາລະກິດຂອງພຣະອົງເອງ. ພຣະເຈົ້າສະເດັດມາເພື່ອປະຕິບັດພາລະກິດຂອງພຣະອົງໂດຍກົງ: ພຣະອົງບໍ່ໄດ້ຖືກມະນຸດເຮັດໃຫ້ສົມບູນ ແລະ ພາລະກິດຂອງພຣະອົງບໍ່ໄດ້ຖືກປະຕິບັດອີງຕາມຄຳສັ່ງສອນຂອງມະນຸດຄົນໃດຄົນໜຶ່ງ. ໃນຂັ້ນຕອນນີ້ຂອງພາລະກິດ, ພຣະເຈົ້າບໍ່ໄດ້ນຳພາໂດຍການເວົ້າເຖິງປະສົບການສ່ວນຕົວຂອງພຣະອົງ, ແຕ່ກົງກັນຂ້າມ ພຣະອົງປະຕິບັດພາລະກິດຂອງພຣະອົງໂດຍກົງ ຕາມສິ່ງທີ່ພຣະອົງມີ. ຕົວຢ່າງເຊັ່ນ: ການທົດລອງຂອງຜູ້ບໍລິການ, ເວລາແຫ່ງການຂ້ຽນຕີ, ການທົດລອງແຫ່ງຄວາມຕາຍ, ເວລາແຫ່ງການຮັກພຣະເຈົ້າ... ສິ່ງນີ້ລ້ວນແລ້ວແຕ່ເປັນພາລະກິດທີ່ບໍ່ເຄີຍຖືກປະຕິບັດມາກ່ອນ ແລະ ເປັນພາລະກິດທີ່ຢູ່ໃນຍຸກປັດຈຸບັນ ແທນທີ່ຈະຢູ່ໃນປະສົບການຂອງມະນຸດ. ໃນພຣະທຳທີ່ເຮົາກ່າວ, ອັນໃດແມ່ນປະສົບການຂອງມະນຸດ? ພວກມັນບໍ່ແມ່ນລ້ວນແລ້ວແຕ່ມາຈາກພຣະວິນຍານໂດຍກົງບໍ ແລະ ພວກມັນບໍ່ໄດ້ຖືກປະກາດອອກໂດຍພຣະວິນຍານບໍ? ມັນເປັນຍ້ອນຄວາມສາມາດຂອງເຈົ້າຕໍ່າຫຼາຍ ເຈົ້າຈຶ່ງບໍ່ສາມາດເຫັນຜ່ານຄວາມຈິງໄດ້! ຫົນທາງຕົວຈິງແຫ່ງຊີວິດທີ່ເຮົາກ່າວເຖິງແມ່ນການນຳພາໃນເສັ້ນທາງ ແລະ ບໍ່ມີໃຜເຄີຍເວົ້າມາກ່ອນ ຫຼື ບໍ່ມີໃຜເຄີຍພະເຊີນກັບເສັ້ນທາງນີ້ ຫຼື ຮູ້ຈັກຄວາມຈິງນີ້. ກ່ອນທີ່ເຮົາຈະກ່າວພຣະທຳເຫຼົ່ານີ້ອອກມາ, ບໍ່ມີໃຜເຄີຍກ່າວພຣະທຳເຫຼົ່ານັ້ນມາກ່ອນ. ບໍ່ມີໃຜເຄີຍເວົ້າເຖິງປະສົບການດັ່ງກ່າວ ຫຼື ພວກເຂົາບໍ່ເຄີຍເວົ້າເຖິງລາຍລະອຽດດັ່ງກ່າວ ແລະ ຍິ່ງໄປກວ່ານັ້ນ ບໍ່ມີໃຜເຄີຍຊີ້ເຖິງສະພາວະດັ່ງກ່າວເພື່ອເປີດເຜີຍສິ່ງເຫຼົ່ານີ້. ບໍ່ມີໃຜເຄີຍນຳພາເສັ້ນທາງທີ່ເຮົານຳໃນປັດຈຸບັນ ແລະ ຖ້າມະນຸດໄດ້ນຳພາມາກ່ອນ, ແລ້ວມັນກໍຈະບໍ່ແມ່ນຫົນທາງໃໝ່. ລອງເອົາໂປໂລ ແລະ ເປໂຕເປັນຕົວຢ່າງ: ພວກເພິ່ນບໍ່ມີປະສົບການສ່ວນຕົວຂອງພວກເພິ່ນເອງກ່ອນທີ່ພຣະເຢຊູຈະນຳພາເສັ້ນທາງ. ພຽງແຕ່ຫຼັງຈາກທີ່ພຣະເຢຊູນຳພາເສັ້ນທາງນັ້ນ ພວກເພິ່ນຈຶ່ງພະເຊີນກັບພຣະທຳທີ່ກ່າວໄວ້ໂດຍພຣະເຢຊູ ແລະ ເສັ້ນທາງທີ່ພຣະອົງນຳພາ; ຈາກສິ່ງນັ້ນ ພວກເພິ່ນໄດ້ຮັບປະສົບການຢ່າງຫຼາຍ ແລະ ຂຽນຈົດໝາຍຫຼາຍສະບັບ. ດ້ວຍເຫດນັ້ນ ປະສົບການຂອງມະນຸດຈຶ່ງບໍ່ຄືກັບພາລະກິດຂອງພຣະເຈົ້າ ແລະ ພາລະກິດຂອງພຣະເຈົ້າກໍບໍ່ຄືກັບຄວາມຮູ້ທີ່ບັນລະຍາຍໂດຍແນວຄິດ ແລະ ປະສົບການຂອງມະນຸດ. ເຮົາໄດ້ກ່າວຄັ້ງແລ້ວຄັ້ງເລົ່າວ່າ ໃນປັດຈຸບັນ ເຮົາກຳລັງນຳພາເສັ້ນທາງໃໝ່ ແລະ ປະຕິບັດພາລະກິດໃໝ່ ແລະ ພາລະກິດ ແລະ ຖ້ອຍຄຳຂອງເຮົາກໍແຕກຕ່າງຈາກຂອງໂຢຮັນ ແລະ ຜູ້ປະກາດ

ພຣະທຳຄົນອື່ນໆ. ເຮົາບໍ່ເຄີຍໄດ້ຮັບປະສົບການມາກ່ອນ ແລ້ວກ່າວພວກມັນຕໍ່ພວກເຈົ້າ, ສິ່ງນີ້ບໍ່ແມ່ນຄວາມຈິງເລີຍ. ຖ້າມັນເປັນແບບນັ້ນ, ສິ່ງນັ້ນຈະບໍ່ໄດ້ເຮັດໃຫ້ພວກເຈົ້າຊັກຊ້າແຕ່ດົນແລ້ວບໍ? ໃນອະດີດ ຄວາມຮູ້ທີ່ຫຼາຍຄົນເວົ້າເຖິງກໍສູງສົ່ງເຊັ່ນກັນ, ແຕ່ຄຳເວົ້າທຸກຄຳຂອງພວກເຂົາພຽງແຕ່ເວົ້າອອກໂດຍອີງຕາມຄຳເວົ້າຂອງຄົນທີ່ເອີ້ນກັນວ່າເປັນບຸກຄົນຝ່າຍວິນຍານ. ພວກເຂົາບໍ່ໄດ້ນຳທາງ, ແຕ່ມາຈາກປະສົບການຂອງພວກເຂົາເອງ, ມາຈາກສິ່ງທີ່ພວກເຂົາເຫັນ ແລະ ຈາກຄວາມຮູ້ຂອງພວກເຂົາ. ບາງສິ່ງກໍເປັນແນວຄິດຂອງພວກເຂົາ ແລະ ບາງຢ່າງກໍປະກອບດ້ວຍປະສົບການທີ່ພວກເຂົາໄດ້ສະຫຼຸບໄວ້ແລ້ວ. ໃນປັດຈຸບັນ, ທຳມະຊາດແຫ່ງພາລະກິດຂອງເຮົາແມ່ນແຕກຕ່າງຈາກພວກເຂົາທັງສິ້ນ. ເຮົາບໍ່ເຄີຍຜະເຊີນກັບການຖືກຄົນອື່ນນຳພາ ຫຼື ເຮົາບໍ່ເຄີຍຍອມໃຫ້ຄົນອື່ນເຮັດໃຫ້ສົມບູນ. ຍິ່ງໄປກວ່ານັ້ນ ທຸກສິ່ງທີ່ເຮົາໄດ້ກ່າວ ແລະ ສົນທະນາແມ່ນບໍ່ຄືກັບຄົນອື່ນ ແລະ ບໍ່ມີໃຜເຄີຍກ່າວເຖິງເລີຍ. ໃນປັດຈຸບັນ ບໍ່ວ່າພວກເຈົ້າຈະເປັນຜູ້ໃດກໍຕາມ ພາລະກິດຂອງພວກເຈົ້າແມ່ນຖືກປະຕິບັດບົນພື້ນຖານຂອງພຣະທຳທີ່ເຮົາໄດ້ກ່າວ. ຫາກປາສະຈາກຖ້ອຍຄຳ ແລະ ພາລະກິດເຫຼົ່ານີ້, ຜູ້ໃດຈະສາມາດຜະເຊີນກັບສິ່ງເຫຼົ່ານີ້ໄດ້ (ການທົດລອງຂອງຜູ້ບໍລິການ, ເວລາແຫ່ງການຂ້ຽນຕີ...) ແລະ ຜູ້ໃດຈະສາມາດເວົ້າເຖິງຄວາມຮູ້ດັ່ງກ່າວໄດ້? ເຈົ້າບໍ່ສາມາດເຫັນສິ່ງນີ້ແທ້ບໍ? ບໍ່ວ່າຈະເປັນຂັ້ນຕອນໃດໃນພາລະກິດກໍຕາມ, ທັນທີທີ່ພຣະທຳຂອງເຮົາຖືກກ່າວອອກມາ, ພວກເຈົ້າເລີ່ມສົນທະນາຕາມພຣະທຳຂອງເຮົາ ແລະ ປະຕິບັດພາລະກິດຕາມພຣະທຳເຫຼົ່ານັ້ນ ແລະ ມັນບໍ່ແມ່ນວິທີທີ່ຄົນໃດຄົນໜຶ່ງໃນພວກເຈົ້າໄດ້ຄິດມາກ່ອນ. ເມື່ອມາໄກປານນີ້ແລ້ວ ເຈົ້າຍັງບໍ່ສາມາດເຫັນຄຳຖາມທີ່ແຈ່ມແຈ້ງ ແລະ ທຳມະດານັ້ນບໍ? ມັນບໍ່ແມ່ນວິທີທີ່ບາງຄົນຈະຄິດຂຶ້ນເອງໄດ້ ຫຼື ມັນບໍ່ໄດ້ອີງຕາມຄວາມຄິດຂອງບຸກຄົນຝ່າຍວິນຍານ. ມັນເປັນເສັ້ນທາງໃໝ່ ແລະ ແມ່ນແຕ່ພຣະທຳຫຼາຍຂໍ້ທີ່ພຣະເຢຊູເຄີຍກ່າວໄວ້ກໍໃຊ້ບໍ່ໄດ້ອີກຕໍ່ໄປ. ສິ່ງທີ່ເຮົາກ່າວເຖິງແມ່ນພາລະກິດແຫ່ງການເປີດຍຸກໃໝ່ ແລະ ມັນເປັນພາລະກິດທີ່ເປັນອິດສະຫຼະ; ພາລະກິດທີ່ເຮົາປະຕິບັດ ແລະ ພຣະທຳທີ່ເຮົາກ່າວເຖິງລ້ວນແລ້ວແຕ່ເປັນສິ່ງໃໝ່. ສິ່ງນີ້ບໍ່ແມ່ນພາລະກິດໃໝ່ໃນປັດຈຸບັນບໍ? ພາລະກິດຂອງພຣະເຢຊູກໍເປັນແບບນີ້ເຊັ່ນກັນ. ພາລະກິດຂອງພຣະອົງແມ່ນແຕກຕ່າງຈາກຄົນທີ່ຢູ່ໃນພຣະວິຫານເຊັ່ນກັນ ແລະ ພ້ອມນັ້ນ ມັນກໍຍັງແຕກຕ່າງຈາກພາລະກິດຂອງພວກຟາຣີຊາຍອີກດ້ວຍ ຫຼື ມັນບໍ່ໄດ້ມີລັກສະນະຄ້າຍຄືກັບສິ່ງທີ່ປະຊາຊົນອິດສະຣາເອນທຸກຄົນປະຕິບັດ. ຫຼັງຈາກທີ່ໄດ້ເຫັນເຖິງສິ່ງນັ້ນ ຜູ້ຄົນກໍບໍ່ສາມາດຕັດສິນໃຈໄດ້: "ພຣະເຈົ້າເປັນຜູ້ປະຕິບັດແທ້ບໍ?" ພຣະເຢຊູບໍ່ໄດ້ຖືກົດບັນຍັດຂອງພຣະເຢໂຮວາ; ເມື່ອພຣະອົງມາເພື່ອສັ່ງສອນມະນຸດ, ທຸກສິ່ງທີ່ພຣະອົງກ່າວກໍໃໝ່ ແລະ ແຕກຕ່າງຈາກສິ່ງທີ່ໄພ່ພົນໃນຍຸກບູຮານ ແລະ ຜູ້ປະກາດພຣະທຳແຫ່ງພຣະສັນຍາເດີມໄດ້ກ່າວໄວ້ ແລະ ຍ້ອນສິ່ງນີ້ ຜູ້ຄົນຍັງຄົງບໍ່ແນ່ໃຈ. ນີ້ແມ່ນສິ່ງທີ່ເຮັດໃຫ້ມະນຸດຖືກຈັດການໄດ້ຍາກ. ກ່ອນການຮັບເອົາຂັ້ນຕອນໃໝ່ນີ້ຂອງພາລະກິດ, ເສັ້ນທາງທີ່ພວກເຈົ້າສ່ວນໃຫຍ່ຍ່າງກໍຄືການປະຕິບັດ ແລະ ເຂົ້າສູ່ ໂດຍອີງຕາມພື້ນຖານຂອງເສັ້ນທາງຂອງບຸກຄົນຝ່າຍວິນຍານເຫຼົ່ານັ້ນ. ແຕ່ໃນປັດຈຸບັນ, ພາລະກິດທີ່ເຮົາປະຕິບັດແມ່ນແຕກຕ່າງກັນຢ່າງໃຫຍ່ຫຼວງ ແລະ ສະນັ້ນພວກເຈົ້າຈຶ່ງບໍ່ສາມາດຕັດສິນໃຈໄດ້ວ່າມັນຖືກຕ້ອງ ຫຼື ບໍ່. ເຮົາບໍ່ສົນໃຈວ່າເຈົ້າຍ່າງໃນເສັ້ນທາງໃດ

ມາກ່ອນ ຫຼື ເຮົາບໍ່ສົນໃຈວ່າເຈົ້າກິນ "ອາຫານ" ຂອງໃຜ ຫຼື ເຈົ້າຮັບເອົາຜູ້ໃດເປັນ "ພໍ່" ຂອງເຈົ້າ. ຍ້ອນເຮົາໄດ້ມາ ແລະ ນຳເອົາພາລະກິດໃໝ່ມາເພື່ອນຳພາມະນຸດ, ທຸກຄົນທີ່ຕິດຕາມເຮົາກໍຕ້ອງປະຕິບັດຕາມສິ່ງທີ່ເຮົາກ່າວ. ບໍ່ວ່າເຈົ້າຈະມາຈາກ "ຄອບຄົວ" ທີ່ຍິ່ງໃຫຍ່ສໍ່າໃດກໍຕາມ, ເຈົ້າກໍຕ້ອງຕິດຕາມເຮົາ, ເຈົ້າຕ້ອງບໍ່ປະພຶດຕາມການປະຕິບັດກ່ອນໜ້ານີ້ຂອງເຈົ້າ, "ພໍ່ລ້ຽງ" ຂອງເຈົ້າຄວນຫຼີກທາງ ແລະ ເຈົ້າຄວນມາຢູ່ຕໍ່ໜ້າພຣະເຈົ້າຂອງເຈົ້າເພື່ອສະແຫວງຫາສ່ວນແບ່ງທີ່ຄວນເປັນຂອງເຈົ້າ. ທັງໝົດຂອງເຈົ້າແມ່ນຢູ່ໃນມືຂອງເຮົາ ແລະ ເຈົ້າບໍ່ຄວນອຸທິດຄວາມເຊື່ອຢ່າງຫຼັບຫູຫຼັບຕາຫຼາຍເກີນໄປກັບພໍ່ລ້ຽງຂອງເຈົ້າ; ເຂົາບໍ່ສາມາດຄວບຄຸມເຈົ້າໄດ້ຢ່າງສົມບູນ. ພາລະກິດໃນປັດຈຸບັນເກີດຂຶ້ນໂດຍບໍ່ຂຶ້ນກັບຫຍັງ. ທຸກສິ່ງທີ່ເຮົາເວົ້າໃນມື້ນີ້ບໍ່ໄດ້ອີງບົນພື້ນຖານທີ່ມາຈາກອະດີດຢ່າງແນ່ນອນ; ມັນເປັນການເລີ່ມຕົ້ນໃໝ່ ແລະ ຖ້າເຈົ້າເວົ້າວ່າ ມັນຖືກສ້າງຂຶ້ນໂດຍມືຂອງມະນຸດ, ແລ້ວເຈົ້າກໍເປັນຄົນທີ່ຕາບອດຫຼາຍຈົນເກີນທີ່ຈະຊ່ວຍໃຫ້ລອດພົ້ນໄດ້!

ເອຊາຢາ, ເອເຊກຽນ, ໂມເຊ, ເດວິດ, ອັບຣາຮາມ ແລະ ດານີເອນແມ່ນຜູ້ນຳ ຫຼື ຜູ້ປະກາດພຣະທຳທີ່ຢູ່ທ່າມກາງປະຊາຊົນອິດສະຣາເອນເຊິ່ງເປັນຄົນທີ່ຖືກເລືອກ. ເປັນຫຍັງພວກເຂົາຈຶ່ງບໍ່ຖືກເອີ້ນວ່າພຣະເຈົ້າ? ເປັນຫຍັງພຣະວິນຍານບໍລິສຸດຈຶ່ງບໍ່ເປັນພະຍານໃຫ້ກັບພວກເຂົາ? ເປັນຫຍັງພຣະວິນຍານບໍລິສຸດຈຶ່ງເປັນພະຍານໃຫ້ກັບພຣະເຢຊູທັນທີທີ່ພຣະອົງເລີ່ມຕົ້ນພາລະກິດຂອງພຣະອົງ ແລະ ເລີ່ມຕົ້ນກ່າວພຣະທຳຂອງພຣະອົງ? ແລ້ວເປັນຫຍັງພຣະວິນຍານບໍລິສຸດຈຶ່ງບໍ່ເປັນພະຍານໃຫ້ກັບຄົນອື່ນໆ? ພວກເຂົາ ເຊິ່ງເປັນມະນຸດທີ່ມາຈາກເນື້ອໜັງ ແມ່ນລ້ວນແລ້ວແຕ່ຖືກເອີ້ນວ່າ "ພຣະຜູ້ເປັນເຈົ້າ". ບໍ່ວ່າພວກເຂົາຈະຖືກເອີ້ນວ່າແນວໃດກໍຕາມ, ພາລະກິດຂອງພວກເຂົາເປັນຕົວແທນໃຫ້ກັບການເປັນຢູ່ ແລະ ແກ່ນແທ້ຂອງພວກເຂົາ ແລະ ການເປັນຢູ່ ແລະ ແກ່ນແທ້ຂອງພວກເຂົາກໍເປັນຕົວແທນໃຫ້ກັບຕົວຕົນຂອງພວກເຂົາ. ແກ່ນແທ້ຂອງພວກເຂົາບໍ່ໄດ້ກ່ຽວຂ້ອງກັບຕຳແໜ່ງຂອງພວກເຂົາ; ມັນເປັນຕົວແທນໃຫ້ກັບສິ່ງທີ່ພວກເຂົາສະແດງອອກມາ ແລະ ສິ່ງທີ່ພວກເຂົາດຳລົງຊີວິດຕາມ. ໃນພຣະສັນຍາເດີມ, ການຖືກເອີ້ນວ່າ ພຣະຜູ້ເປັນເຈົ້າ ແມ່ນຖືວ່າທຳມະດາ ແລະ ບຸກຄົນອາດຖືກເອີ້ນໃນວິທີໃດກໍໄດ້, ແຕ່ແກ່ນແທ້ ແລະ ຕົວຕົນຕາມທຳມະຊາດຂອງເຂົາປ່ຽນແປງບໍ່ໄດ້. ໃນບັນດາພຣະຄຣິດປອມ, ຜູ້ປະກາດພຣະທຳປອມ ແລະ ຜູ້ຫຼອກລວງ, ບໍ່ໄດ້ມີຄົນທີ່ຖືກເອີ້ນວ່າ "ພຣະເຈົ້າ" ເຊັ່ນກັນບໍ? ແລ້ວເປັນຫຍັງພວກເຂົາຈຶ່ງບໍ່ແມ່ນພຣະເຈົ້າ? ເພາະພວກເຂົາບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າ. ພວກເຂົາເປັນມະນຸດໂດຍຕົ້ນກຳເນີດ, ຜູ້ຫຼອກລວງຜູ້ຄົນ, ບໍ່ແມ່ນພຣະເຈົ້າ ແລະ ສະນັ້ນ ພວກເຂົາຈຶ່ງບໍ່ມີຕົວຕົນຂອງພຣະເຈົ້າ. ເດວິດບໍ່ໄດ້ຖືກເອີ້ນວ່າພຣະຜູ້ເປັນເຈົ້າໃນທ່າມກາງສິບສອງຊົນເຜົ່າເຊັ່ນກັນບໍ? ພຣະເຢຊູກໍຖືກເອີ້ນວ່າພຣະຜູ້ເປັນເຈົ້າເຊັ່ນກັນ; ແລ້ວເປັນຫຍັງຈຶ່ງມີແຕ່ພຣະເຢຊູຜູ້ດຽວທີ່ຖືກເອີ້ນວ່າພຣະເຈົ້າທີ່ບັງເກີດເປັນມະນຸດ? ເຢເຣມີຢາບໍ່ໄດ້ເປັນທີ່ຮູ້ຈັກກັນວ່າເປັນບຸດມະນຸດເຊັ່ນກັນບໍ? ແລ້ວພຣະເຢຊູບໍ່ໄດ້ເປັນທີ່ຮູ້ຈັກກັນວ່າເປັນບຸດມະນຸດບໍ? ເປັນຫຍັງພຣະເຢຊູຈຶ່ງຖືກຄຶງເທິງໄມ້ກາງແຂນແທນພຣະເຈົ້າ? ມັນບໍ່ແມ່ນຍ້ອນແກ່ນແທ້ຂອງພຣະອົງແຕກຕ່າງອອກໄປບໍ? ມັນບໍ່ແມ່ນຍ້ອນພາລະກິດທີ່ພຣະອົງປະຕິບັດນັ້ນແຕກຕ່າງບໍ? ນາມມະຍົດ

ສຳຄັນບໍ? ເຖິງແມ່ນພຣະເຢຊູຖືກເອີ້ນວ່າບຸດມະນຸດຄືກັນ, ພຣະອົງກໍເປັນການບັງເກີດເປັນມະນຸດຄັ້ງທຳອິດຂອງພຣະເຈົ້າ, ພຣະອົງສະເດັດມາເພື່ອຮັບເອົາລິດອຳນາດ ແລະ ເຮັດໃຫ້ພາລະກິດແຫ່ງການໄຖ່ບາບສຳເລັດລົງ. ສິ່ງນີ້ພິສູດວ່າຕົວຕົນ ແລະ ແກ່ນແທ້ຂອງພຣະເຢຊູແມ່ນແຕກຕ່າງຈາກຄົນອື່ນທີ່ຖືກເອີ້ນວ່າບຸດມະນຸດເຊັ່ນກັນ. ໃນປັດຈຸບັນ ຜູ້ໃດໃນບັນດາພວກເຈົ້າທີ່ກ້າເວົ້າວ່າ ຄຳເວົ້າທຸກຂໍ້ທີ່ກ່າວໂດຍຄົນທີ່ຖືກພຣະວິນຍານບໍລິສຸດໃຊ້ແມ່ນມາຈາກພຣະວິນຍານບໍລິສຸດ? ມີໃຜກ້າເວົ້າສິ່ງດັ່ງກ່າວບໍ? ຖ້າເຈົ້າເວົ້າສິ່ງດັ່ງກ່າວ, ແລ້ວເປັນຫຍັງໜັງສືແຫ່ງການທຳນາຍຂອງເອຊະຣາຈຶ່ງຖືກປະຖິ້ມ ແລະ ເປັນຫຍັງສິ່ງດຽວກັນຈຶ່ງເກີດຂຶ້ນກັບໜັງສືຂອງໄພ່ພົນ ແລະ ຜູ້ປະກາດພຣະທຳໃນຍຸກບູຮານ? ຖ້າພວກເຂົາລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ, ແລ້ວເປັນຫຍັງພວກເຈົ້າຈຶ່ງກ້າທີ່ຕັດສິນໃຈຕາມຄວາມຮູ້ສຶກແບບນັ້ນ? ເຈົ້າມີຄຸນສົມບັດທີ່ຈະເລືອກພາລະກິດຂອງພຣະວິນຍານບໍລິສຸດບໍ? ມີຫຼາຍເລື່ອງລາວຈາກອິດສະຣາເອນທີ່ຖືກປະຖິ້ມເຊັ່ນກັນ. ແລ້ວຖ້າເຈົ້າເຊື່ອວ່າບົດຂຽນເຫຼົ່ານີ້ທີ່ຢູ່ໃນອະດີດລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ, ແລ້ວເປັນຫຍັງໜັງສືບາງເຫຼັ້ມຈຶ່ງຖືກປະຖິ້ມ? ຖ້າໜັງສືທຸກເຫຼັ້ມລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ, ພວກມັນກໍຄວນຖືກຮັກສາໄວ້ໝົດ ແລະ ຖືກສົ່ງໄປໃຫ້ອ້າຍເອື້ອຍນ້ອງທີ່ຢູ່ໃນຄຣິສຕະຈັກອ່ານ. ພວກມັນບໍ່ຄວນຖືກເລືອກ ຫຼື ປະຖິ້ມຕາມຄວາມປະສົງຂອງມະນຸດ; ມັນຄືສິ່ງທີ່ຜິດໃນການເຮັດແບບນັ້ນ. ການເວົ້າວ່າປະສົບການຂອງໂປໂລ ແລະ ໂຢຮັນແມ່ນປະປົນກັບຄວາມເຂົ້າໃຈສ່ວນຕົວຂອງພວກເຂົາບໍ່ໄດ້ໝາຍຄວາມວ່າ ປະສົບການ ແລະ ຄວາມຮູ້ຂອງພວກເຂົາມາຈາກຊາຕານ, ພຽງແຕ່ວ່າພວກເຂົາມີສິ່ງທີ່ມາຈາກປະສົບການ ແລະ ຄວາມເຂົ້າໃຈສ່ວນຕົວຂອງພວກເຂົາ. ຄວາມຮູ້ຂອງພວກເຂົາແມ່ນອີງຕາມເບື້ອງຫຼັງຂອງປະສົບການຕົວຈິງຂອງພວກເຂົາໃນເວລານັ້ນ ແລະ ຜູ້ໃດສາມາດເວົ້າຢ່າງໝັ້ນໃຈວ່າທຸກສິ່ງແມ່ນມາຈາກພຣະວິນຍານບໍລິສຸດ? ຖ້າພຣະກິດຕິຄຸນທັງສີ່ລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ, ແລ້ວເປັນຫຍັງມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນຈຶ່ງເວົ້າບາງສິ່ງທີ່ແຕກຕ່າງກັນກ່ຽວກັບພາລະກິດຂອງພຣະເຢຊູ? ຖ້າພວກເຈົ້າບໍ່ເຊື່ອສິ່ງນີ້, ແລ້ວໃຫ້ເບິ່ງເລື່ອງລາວໃນພຣະຄຳພີທີ່ກ່ຽວກັບວິທີທີ່ເປໂຕປະຕິເສດພຣະຜູ້ເປັນເຈົ້າທັງສາມຄັ້ງ: ໜັງສືທຸກເຫຼັ້ມແມ່ນແຕກຕ່າງກັນໝົດ ແລະ ພວກມັນແຕ່ລະເຫຼັ້ມກໍມີລັກສະນະຂອງພວກເຂົາເອງ. ຫຼາຍຄົນທີ່ບໍ່ມີຄວາມຮູ້ເວົ້າວ່າ: "ພຣະເຈົ້າທີ່ບັງເກີດເປັນມະນຸດກໍຍັງເປັນມະນຸດເຊັ່ນກັນ ແລ້ວພຣະທຳທີ່ພຣະອົງກ່າວຈະສາມາດມາຈາກພຣະວິນຍານບໍລິສຸດທັງໝົດໄດ້ບໍ? ຖ້າຄຳເວົ້າຂອງໂປໂລ ແລະ ໂຢຮັນແມ່ນປະປົນກັບຄວາມປະສົງຂອງມະນຸດ, ແລ້ວພຣະທຳທີ່ພຣະອົງກ່າວຈະບໍ່ປະປົນກັບຄວາມປະສົງຂອງມະນຸດແທ້ບໍ?" ຜູ້ຄົນທີ່ເວົ້າສິ່ງດັ່ງກ່າວແມ່ນຕາບອດ ແລະ ບໍ່ມີຄວາມຮູ້! ໃຫ້ອ່ານພຣະກິດຕິຄຸນທັງສີ່ຢ່າງລະອຽດ; ໃຫ້ອ່ານສິ່ງທີ່ພວກເຂົາບັນທຶກກ່ຽວກັບສິ່ງທີ່ພຣະເຢຊູໄດ້ກະທຳ ແລະ ພຣະທຳທີ່ພຣະອົງໄດ້ກ່າວ. ແຕ່ລະເລື່ອງລາວກໍແຕກຕ່າງກັນພໍສົມຄວນ ແລະ ແຕ່ລະເລື່ອງລາວກໍມີທັດສະນະມຸມມອງຂອງໃຜມັນ. ຖ້າສິ່ງທີ່ນັກປະພັນໜັງສືເຫຼົ່ານີ້ຂຽນຂຶ້ນລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ, ແລ້ວມັນກໍຄວນຄືກັນ ແລະ ສະໝໍ່າສະເໝີກັນທັງໝົດ. ແລ້ວເປັນຫຍັງຈຶ່ງມີຄວາມບໍ່ກົງກັນ? ມະນຸດໂງ່ຈ້າປານນັ້ນບໍ ຈຶ່ງບໍ່ສາມາດເຂົ້າໃຈສິ່ງນີ້ໄດ້? ຖ້າເຈົ້າ

ຖືກຮ້ອງໃຫ້ເປັນພະຍານໃຫ້ກັບພຣະເຈົ້າ, ເຈົ້າສາມາດໃຫ້ຄຳພະຍານປະເພດໃດໄດ້ແດ່? ວິທີການດັ່ງກ່າວໃນການຮູ້ຈັກພຣະເຈົ້າສາມາດເປັນພະຍານໃຫ້ກັບພຣະອົງໄດ້ບໍ? ຖ້າຄົນອື່ນຖາມເຈົ້າວ່າ "ຖ້າການບັນທຶກຂອງໂຢຮັນ ແລະ ລູກາແມ່ນປະປົນກັບຄວາມປະສົງຂອງມະນຸດ, ແລ້ວຄຳເວົ້າທີ່ພຣະເຈົ້າຂອງພວກເຈົ້າເວົ້າຈະບໍ່ປະປົນກັບຄວາມປະສົງຂອງມະນຸດບໍ?" ເຈົ້າຈະສາມາດໃຫ້ຄຳຕອບຢ່າງຊັດເຈນໄດ້ບໍ? ຫຼັງຈາກທີ່ລູກາ ແລະ ມັດທາຍໄດ້ຍິນພຣະທຳຂອງພຣະເຢຊູ ແລະ ເຫັນພາລະກິດຂອງພຣະເຢຊູ, ພວກເຂົາກໍເວົ້າເຖິງຄວາມຮູ້ຂອງພວກເຂົາເອງ ໃນລັກສະນະທີ່ລະລຶກເຖິງລາຍລະອຽດຂອງຄວາມຈິງບາງຢ່າງກ່ຽວກັບພາລະກິດທີ່ພຣະເຢຊູໄດ້ເຮັດ. ເຈົ້າສາມາດເວົ້າໄດ້ບໍວ່າ ຄວາມຮູ້ຂອງພວກເຂົາແມ່ນຖືກເປີດເຜີຍໂດຍພຣະວິນຍານບໍລິສຸດທັງໝົດ? ນອກພຣະຄຳພີ, ມີບຸກຄົນຝ່າຍວິນຍານຫຼາຍຄົນທີ່ມີຄວາມຮູ້ສູງກວ່າພວກເຂົາ; ແລ້ວເປັນຫຍັງຄຳເວົ້າຂອງພວກເຂົາຈຶ່ງບໍ່ຖືກຮັບເອົາໂດຍຄົນຮຸ່ນຫຼັງ? ພວກເຂົາບໍ່ໄດ້ຖືກພຣະວິນຍານບໍລິສຸດໃຊ້ຄືກັນບໍ? ໃຫ້ຮູ້ວ່າໃນພາລະກິດແຫ່ງປັດຈຸບັນ, ເຮົາບໍ່ໄດ້ກຳລັງເວົ້າເຖິງການເຂົ້າໃຈຂອງເຮົາເອງໂດຍອີງຕາມພື້ນຖານແຫ່ງພາລະກິດຂອງພຣະເຢຊູ ຫຼື ເຮົາບໍ່ໄດ້ກ່າວອີງຕາມຄວາມຮູ້ຂອງເຮົາເອງເພື່ອຕໍ່ຕ້ານເບື້ອງຫຼັງແຫ່ງພາລະກິດຂອງພຣະເຢຊູ. ພຣະເຢຊູປະຕິບັດພາລະກິດຫຍັງແດ່ໃນເວລານັ້ນ? ແລ້ວເຮົາກຳລັງປະຕິບັດພາລະກິດຫຍັງໃນປັດຈຸບັນ? ສິ່ງທີ່ເຮົາເຮັດ ແລະ ກ່າວບໍ່ມີໃຜເຄີຍເຮັດມາກ່ອນ. ເສັ້ນທາງທີ່ເຮົາຍ່າງໃນປັດຈຸບັນນີ້ ບໍ່ມີໃຜຍ່າງມາກ່ອນ, ຜູ້ຄົນໃນຍຸກຕ່າງໆ ແລະ ຄົນຮຸ່ນຕ່າງໆໃນອະດີດກໍບໍ່ເຄີຍຍ່າງຈັກເທື່ອ. ໃນປັດຈຸບັນ ມັນຖືກລິເລີ່ມແລ້ວ ແລະ ນີ້ບໍ່ແມ່ນພາລະກິດຂອງພຣະວິນຍານບໍ? ເຖິງແມ່ນມັນຄືພາລະກິດຂອງພຣະວິນຍານບໍລິສຸດ, ຜູ້ນຳໃນອະດີດກໍລ້ວນແລ້ວແຕ່ປະຕິບັດພາລະກິດຂອງພວກເຂົາບົນພື້ນຖານຂອງຄົນອື່ນ; ເຖິງຢ່າງໃດກໍຕາມ ພາລະກິດຂອງພຣະເຈົ້າເອງແມ່ນແຕກຕ່າງກັນ. ຂັ້ນຕອນຂອງພາລະກິດຂອງພຣະເຢຊູກໍຄືກັນ: ພຣະອົງເປີດຫົນທາງໃໝ່. ເມື່ອພຣະອົງມາ ພຣະອົງໄດ້ເທດສະໜາກ່ຽວກັບຂ່າວປະເສີດແຫ່ງອານາຈັກສະຫວັນ ແລະ ເວົ້າວ່າມະນຸດຄວນກັບໃຈ ແລະ ສາລະພາບບາບ. ຫຼັງຈາກທີ່ພຣະເຢຊູໄດ້ເຮັດສຳເລັດພາລະກິດຂອງພຣະອົງ, ເປໂຕ ແລະ ໂປໂລ ແລະ ຄົນອື່ນໆກໍເລີ່ມສືບຕໍ່ພາລະກິດຂອງພຣະເຢຊູ. ຫຼັງຈາກທີ່ພຣະເຢຊູຖືກຄຶງໃສ່ໄມ້ກາງແຂນ ແລະ ສະເດັດຂຶ້ນສູ່ສະຫວັນ, ພວກເຂົາກໍຖືກພຣະວິນຍານສົ່ງມາໃຫ້ເຜີຍແຜ່ຫົນທາງແຫ່ງໄມ້ກາງແຂນ. ເຖິງແມ່ນວ່າຄຳເວົ້າຂອງໂປໂລນັ້ນສູງສົ່ງ, ພຣະທຳເຫຼົ່ານັ້ນກໍຍັງຢູ່ບົນພື້ນຖານຂອງສິ່ງທີ່ພຣະເຢຊູໄດ້ເວົ້າ ເຊັ່ນ: ຄວາມອົດທົນ, ຄວາມຮັກ, ຄວາມທົນທຸກ, ການປົກຄຸມຫົວ, ການຮັບບັບຕິດສະມາ ຫຼື ຄຳສັ່ງສອນອື່ນໆທີ່ໃຫ້ປະຕິບັດຕາມ. ທຸກສິ່ງເຫຼົ່ານີ້ແມ່ນກ່າວຢູ່ບົນພື້ນຖານແຫ່ງພຣະທຳຂອງພຣະເຢຊູ. ພວກເຂົາບໍ່ສາມາດເປີດຫົນທາງທີ່ໃໝ່ ຍ້ອນພວກເຂົາລ້ວນແລ້ວແຕ່ເປັນມະນຸດທີ່ຖືກໃຊ້ໂດຍພຣະເຈົ້າ.

ຖ້ອຍຄຳ ແລະ ພາລະກິດຂອງພຣະເຢຊູໃນເວລານັ້ນບໍ່ໄດ້ຍຶດຖືຕາມທິດສະດີ ແລະ ພຣະອົງບໍ່ໄດ້ປະຕິບັດພາລະກິດຂອງພຣະອົງຕາມພາລະກິດແຫ່ງກົດບັນຍັດຂອງພຣະສັນຍາເດີມ. ມັນຖືກປະຕິບັດອີງຕາມພາລະກິດທີ່ຄວນປະຕິບັດໃນຍຸກແຫ່ງພຣະຄຸນ. ພຣະອົງປະຕິບັດອີງຕາມພາລະກິດທີ່ພຣະອົງໄດ້ນຳມາ, ຕາມແຜນການຂອງພຣະອົງເອງ ແລະ ຕາມພັນທະກິດຂອງພຣະອົງ; ພຣະອົງບໍ່ໄດ້ປະຕິບັດ

ພາລະກິດຕາມກົດບັນຍັດຂອງພຣະສັນຍາເດີມ. ບໍ່ມີຫຍັງທີ່ພຣະອົງເຮັດທີ່ອີງຕາມກົດບັນຍັດແຫ່ງພຣະສັນຍາເດີມ ແລະ ພຣະອົງບໍ່ໄດ້ມາເພື່ອປະຕິບັດພາລະກິດໃຫ້ສຳເລັດຕາມຄຳເວົ້າຂອງຜູ້ປະກາດພຣະທຳ. ແນ່ນອນ ແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຈົ້າບໍ່ແມ່ນປະຕິບັດເພື່ອສຳເລັດຕາມການທຳນາຍຂອງຜູ້ປະກາດພຣະທຳໃນຍຸກບູຮານ ແລະ ພຣະອົງບໍ່ໄດ້ມາເພື່ອປະຕິບັດຕາມຄຳສັ່ງສອນ ຫຼື ພະຍາຍາມເຂົ້າໃຈຄຳພະຍາກອນຂອງຜູ້ປະກາດພຣະທຳໃນຍຸກບູຮານ. ແຕ່ການກະທຳຂອງພຣະອົງກໍບໍ່ໄດ້ທຳລາຍການພະຍາກອນຂອງຜູ້ປະກາດພຣະທຳໃນຍຸກບູຮານ ຫຼື ພວກມັນບໍ່ໄດ້ລົບກວນພາລະກິດທີ່ພຣະອົງໄດ້ປະຕິບັດກ່ອນໜ້ານັ້ນ. ຈຸດສຳຄັນຂອງພາລະກິດຂອງພຣະອົງບໍ່ແມ່ນການປະຕິບັດຕາມຄຳສັ່ງສອນຢ່າງໃດຢ່າງໜຶ່ງ ແຕ່ເປັນການປະຕິບັດພາລະກິດທີ່ພຣະອົງເອງຄວນປະຕິບັດ. ພຣະອົງບໍ່ແມ່ນຜູ້ປະກາດພຣະທຳ ຫຼື ຜູ້ຮູ້ເຫດການລ່ວງໜ້າ, ແຕ່ເປັນຜູ້ປະຕິບັດ ຜູ້ທີ່ມາເພື່ອປະຕິບັດພາລະກິດທີ່ພຣະອົງເຈດຕະນາຈະປະຕິບັດແທ້ໆ ແລະ ພຣະອົງມາເພື່ອເລີ່ມຍຸກໃໝ່ຂອງພຣະອົງ ແລະ ປະຕິບັດພາລະກິດໃໝ່ຂອງພຣະອົງ. ແນ່ນອນ ເມື່ອພຣະເຢຊູມາເພື່ອປະຕິບັດພາລະກິດຂອງພຣະອົງ, ພຣະອົງກໍໄດ້ເຮັດໃຫ້ຄຳເວົ້າຫຼາຍຂໍ້ທີ່ຜູ້ປະກາດພຣະທຳໃນຍຸກບູຮານໃນພຣະສັນຍາເດີມນັ້ນສຳເລັດລົງເຊັ່ນກັນ ພາລະກິດຂອງປັດຈຸບັນໄດ້ເຮັດໃຫ້ການທຳນາຍຂອງຜູ້ປະກາດພຣະທຳໃນຍຸກບູຮານໃນພຣະສັນຍາເດີມສຳເລັດລົງເຊັ່ນກັນ. ມັນເປັນພຽງແຕ່ວ່າ ເຮົາບໍ່ໄດ້ຍຶດຖືຕາມ "ກາລານຸກົມເກົ່າໆ" ນັ້ນ, ເທົ່ານັ້ນເອງ. ຍ້ອນມີພາລະກິດຫຼາຍຢ່າງອີກທີ່ເຮົາຕ້ອງປະຕິບັດ, ມີພຣະທຳຫຼາຍຂໍ້ອີກທີ່ເຮົາຕ້ອງເວົ້າກັບພວກເຈົ້າ ແລະ ພາລະກິດນີ້ ແລະ ພຣະທຳເຫຼົ່ານີ້ມີຄວາມສຳຄັນຫຼາຍກວ່າການອະທິບາຍຂໍ້ຄວາມຈາກພຣະຄຳພີ, ເພາະພາລະກິດດັ່ງກ່າວບໍ່ມີຄວາມໝາຍ ຫຼື ຄຸນຄ່າທີ່ຍິ່ງໃຫຍ່ສຳລັບພວກເຈົ້າ ແລະ ບໍ່ສາມາດຊ່ວຍພວກເຈົ້າ ຫຼື ປ່ຽນແປງພວກເຈົ້າໄດ້. ເຮົາເຈດຕະນາທີ່ຈະປະຕິບັດພາລະກິດໃໝ່ ບໍ່ແມ່ນເພື່ອໃຫ້ສຳເລັດຕາມຂໍ້ຄວາມໃດໜຶ່ງຈາກພຣະຄຳພີ. ຖ້າພຣະເຈົ້າມາເທິງແຜ່ນດິນໂລກພຽງແຕ່ເພື່ອເຮັດໃຫ້ຄຳເວົ້າຂອງຜູ້ປະກາດພຣະທຳໃນຍຸກບູຮານທີ່ຢູ່ໃນພຣະຄຳພີສຳເລັດລົງ, ແລ້ວຜູ້ໃດຍິ່ງໃຫຍ່ກວ່າກັນ, ພຣະເຈົ້າທີ່ບັງເກີດເປັນມະນຸດ ຫຼື ຜູ້ປະກາດພຣະທຳເຫຼົ່ານັ້ນໃນຍຸກບູຮານ? ແທ້ຈິງແລ້ວ ຜູ້ປະກາດພຣະທຳຄວບຄຸມພຣະເຈົ້າບໍ ຫຼື ພຣະເຈົ້າຄວບຄຸມຜູ້ປະກາດພຣະທຳ? ເຈົ້າຈະອະທິບາຍພຣະທຳເຫຼົ່ານີ້ວ່າແນວໃດ?

ໃນຕອນທຳອິດ ເມື່ອພຣະເຢຊູຍັງບໍ່ໄດ້ປະຕິບັດພັນທະກິດຂອງພຣະອົງຢ່າງເປັນທາງການ, ຄືກັບສາວົກທີ່ຕິດຕາມພຣະອົງ, ບາງເທື່ອ ພຣະອົງກໍເຂົ້າຮ່ວມການຊຸມນຸມເຊັ່ນກັນ ແລະ ຮ້ອງເພງນະມັດສະການ, ສັນລະເສີນ ແລະ ອ່ານພຣະສັນຍາເດີມໃນພຣະວິຫານ. ຫຼັງຈາກທີ່ພຣະອົງໄດ້ຮັບບັບຕິດສະມາ ແລະ ຂຶ້ນຈາກນໍ້າ, ພຣະວິນຍານກໍລົງມາເທິງພຣະອົງຢ່າງເປັນທາງການ ແລະ ເລີ່ມຕົ້ນປະຕິບັດພາລະກິດ, ເປີດເຜີຍຕົວຕົນຂອງພຣະອົງ ແລະ ພັນທະກິດທີ່ພຣະອົງຕ້ອງໄດ້ຮັບ. ກ່ອນໜ້ານີ້, ບໍ່ມີໃຜຮູ້ກ່ຽວກັບຕົວຕົນຂອງພຣະອົງ ແລະ ນອກຈາກມາຣີອາແລ້ວ ແມ່ນແຕ່ໂຢຮັນກໍຍັງບໍ່ຮູ້. ພຣະເຢຊູອາຍຸ 29 ປີ ເມື່ອພຣະອົງຮັບບັບຕິດສະມາ. ຫຼັງຈາກການຮັບບັບຕິດສະມາຂອງພຣະອົງສຳເລັດລົງ, ສະຫວັນກໍເປີດອອກ ແລະ ມີສຽງເວົ້າອອກມາວ່າ: "ນີ້ຄືບຸດຊາຍອັນເປັນທີ່ຮັກຂອງເຮົາ ທີ່

ເຮົາເພິ່ງພໍໃຈທີ່ສຸດ". ຫຼັງຈາກທີ່ພຣະເຢຊູໄດ້ຮັບບັບຕິດສະມາ, ພຣະວິນຍານບໍລິສຸດກໍເລີ່ມເປັນພະຍານໃຫ້ກັບພຣະອົງໃນລັກສະນະນີ້. ກ່ອນການຮັບບັບຕິດສະມາຕອນອາຍຸ 29 ປີ, ພຣະອົງດຳລົງຊີວິດແບບຄົນປົກກະຕິ, ກິນເມື່ອພຣະອົງຄວນກິນ, ນອນ ແລະ ນຸ່ງເຄື່ອງປົກກະຕິ ແລະ ບໍ່ມີຫຍັງກ່ຽວກັບພຣະອົງທີ່ແຕກຕ່າງຈາກຄົນອື່ນ, ແຕ່ວ່າ ແນ່ນອນ ສິ່ງນີ້ແມ່ນຢູ່ໃນສາຍຕາທາງເນື້ອໜັງຂອງມະນຸດເທົ່ານັ້ນ. ບາງເທື່ອ ພຣະອົງກໍອ່ອນແອເກີນໄປ ແລະ ບາງເທື່ອພຣະອົງກໍບໍ່ສາມາດແຍກແຍະສິ່ງຕ່າງໆໄດ້, ຕາມທີ່ຖືກຂຽນໄວ້ໃນພຣະຄຳພີ: ຄວາມສະຫຼາດຂອງພຣະອົງເພີ່ມຂຶ້ນພ້ອມກັບອາຍຸຂອງພຣະອົງ. ຄຳເວົ້າເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າ ພຣະອົງມີຄວາມເປັນມະນຸດປົກກະຕິ ແລະ ທຳມະດາ ແລະ ພຣະອົງບໍ່ໄດ້ແຕກຕ່າງຈາກຄົນປົກກະຕິອື່ນໆເປັນພິເສດ. ພຣະອົງຍັງເຕີບໃຫຍ່ຂຶ້ນແບບຄົນທຳມະດາ ແລະ ບໍ່ມີຫຍັງທີ່ພິເສດກ່ຽວກັບພຣະອົງ. ແຕ່ພຣະອົງກໍຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະເຈົ້າ. ຫຼັງຈາກທີ່ໄດ້ຮັບບັບຕິດສະມາ, ພຣະອົງກໍເລີ່ມຖືກທົດລອງ, ຫຼັງຈາກນັ້ນພຣະອົງກໍເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ ແລະ ກາຍເປັນຜູ້ມີລິດອຳນາດ, ສະຕິປັນຍາ ແລະສິດອຳນາດ. ສິ່ງນີ້ບໍ່ໄດ້ໝາຍຄວາມວ່າພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດໃນພຣະອົງກ່ອນການຮັບບັດຕິດສະມາຂອງພຣະອົງ ຫຼື ບໍ່ໄດ້ສະຖິດຢູ່ໃນພຣະອົງ. ກ່ອນການຮັບບັບຕິດສະມາຂອງພຣະອົງ ພຣະວິນຍານບໍລິສຸດກໍຍັງອາໄສຢູ່ຂ້າງໃນພຣະອົງ ແຕ່ຍັງບໍ່ໄດ້ເລີ່ມປະຕິບັດພາລະກິດຢ່າງເປັນທາງການ, ຍ້ອນມັນມີຂໍ້ຈຳກັດໃນເວລາທີ່ພຣະອົງປະຕິບັດພາລະກິດຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນຄົນທຳມະດາກໍມີຂະບວນການຂອງການເຕີບໃຫຍ່ທີ່ທຳມະດາ. ພຣະວິນຍານບໍລິສຸດດຳລົງຊີວິດພາຍໃນພຣະອົງຢູ່ສະເໝີ. ເມື່ອພຣະເຢຊູເກີດມາ, ພຣະອົງກໍແຕກຕ່າງຈາກຄົນອື່ນ ແລະ ດາວເລີກກໍປະກົດຂຶ້ນ; ກ່ອນທີ່ພຣະອົງປະສູດ, ທູດສະຫວັນກໍໄດ້ປາກົດຕໍ່ໂຢເຊບໃນຄວາມຝັນ ແລະ ບອກເພິ່ນວ່າມາຣີອາຈະໃຫ້ກຳເນີດເດັກນ້ອຍຜູ້ຊາຍ ແລະ ເດັກນັ້ນແມ່ນຖືກປະຕິສົນທິໂດຍພຣະວິນຍານບໍລິສຸດ. ຫຼັງຈາກການຮັບບັບຕິດສະມາຂອງພຣະເຢຊູ, ພຣະວິນຍານບໍລິສຸດກໍເລີ່ມຕົ້ນພາລະກິດຂອງພຣະອົງ, ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ພຣະວິນຍານບໍລິສຸດຫາກໍລົງມາສະຖິດຢູ່ໃນພຣະເຢຊູ. ຄຳເວົ້າທີ່ວ່າພຣະວິນຍານບໍລິສຸດລົງມາເທິງພຣະອົງຄືກັບນົກເຂົາແມ່ນບົ່ງບອກເຖິງການເລີ່ມຕົ້ນຢ່າງເປັນທາງການຂອງພັນທະກິດຂອງພຣະອົງ. ພຣະວິນຍານຂອງພຣະເຈົ້າໄດ້ຢູ່ໃນພຣະອົງກ່ອນໜ້ານີ້ແລ້ວ, ແຕ່ພຣະອົງຍັງບໍ່ໄດ້ເລີ່ມຕົ້ນປະຕິບັດພາລະກິດ ກໍຍ້ອນເວລາຍັງບໍ່ມາເຖິງ ແລະ ພຣະວິນຍານບໍ່ແມ່ນຈະເລີ່ມຕົ້ນພາລະກິດແບບບໍ່ຄິດ. ພຣະວິນຍານເປັນພະຍານໃຫ້ກັບພຣະອົງຜ່ານການຮັບບັບຕິດສະມາ. ເມື່ອພຣະອົງຂຶ້ນມາຈາກນໍ້າ, ພຣະວິນຍານກໍເລີ່ມປະຕິບັດພາລະກິດໃນພຣະອົງຢ່າງເປັນທາງການ ເຊິ່ງສະແດງໃຫ້ເຫັນວ່າເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າໄດ້ເລີ່ມປະຕິບັດພັນທະກິດຂອງພຣະອົງ ແລະ ໄດ້ເລີ່ມພາລະກິດແຫ່ງການໄຖ່ບາບ ນັ້ນກໍຄື ຍຸກແຫ່ງພຣະຄຸນໄດ້ເລີ່ມຕົ້ນຢ່າງເປັນທາງການແລ້ວ. ສະນັ້ນມັນມີເວລາໃນພາລະກິດຂອງພຣະເຈົ້າ ບໍ່ວ່າພຣະອົງຈະປະຕິບັດພາລະກິດຫຍັງກໍຕາມ. ຫຼັງຈາກການຮັບບັບຕິດສະມາຂອງພຣະອົງ ກໍບໍ່ມີການປ່ຽນແປງເປັນພິເສດໃນພຣະເຢຊູ; ພຣະອົງກໍຍັງຢູ່ໃນເນື້ອໜັງເດີມຂອງພຣະອົງ. ມັນເປັນພຽງແຕ່ວ່າພຣະອົງໄດ້ເລີ່ມຕົ້ນພາລະກິດຂອງພຣະອົງ ແລະ

ເປີດເຜີຍຕົວຕົນຂອງພຣະອົງ ແລະ ພຣະອົງກໍເຕັມໄປດ້ວຍສິດອຳນາດ ແລະ ລິດອຳນາດ. ໃນລັກສະນະນີ້ ພຣະອົງຈຶ່ງແຕກຕ່າງຈາກເມື່ອກ່ອນ. ຕົວຕົນຂອງພຣະອົງແມ່ນແຕກຕ່າງ ເຊິ່ງໝາຍຄວາມວ່າ ມີການປ່ຽນແປງທີ່ສຳຄັນໃນສະຖານະຂອງພຣະອົງ; ນີ້ແມ່ນຄຳພະຍານຂອງພຣະວິນຍານບໍລິສຸດ ແລະ ບໍ່ແມ່ນພາລະກິດທີ່ປະຕິບັດໂດຍມະນຸດ. ໃນຕອນເລີ່ມຕົ້ນ ຜູ້ຄົນບໍ່ຮູ້ ແລະ ພວກເຂົາພຽງແຕ່ເລີ່ມຮູ້ຈັກເລັກນ້ອຍຫຼັງຈາກທີ່ພຣະວິນຍານບໍລິສຸດເປັນພະຍານໃຫ້ກັບພຣະເຢຊູໃນລັກສະນະດັ່ງກ່າວ. ຖ້າພຣະເຢຊູໄດ້ປະຕິບັດພາລະກິດທີ່ຍິ່ງໃຫຍ່ກ່ອນທີ່ພຣະວິນຍານບໍລິສຸດເປັນພະຍານໃຫ້ກັບພຣະອົງ, ແຕ່ບໍ່ມີຄຳພະຍານຂອງພຣະເຈົ້າເອງ ແລ້ວບໍ່ວ່າພາລະກິດຂອງພຣະອົງຈະຍິ່ງໃຫຍ່ສໍ່າໃດກໍຕາມ, ຜູ້ຄົນກໍຈະບໍ່ຮູ້ຈັກເຖິງຕົວຕົນຂອງພຣະອົງຈັກເທື່ອ, ຍ້ອນສາຍຕາຂອງມະນຸດຈະບໍ່ສາມາດເຫັນສິ່ງນັ້ນໄດ້ຈັກເທື່ອ. ຫາກປາສະຈາກຂັ້ນຕອນແຫ່ງຄຳພະຍານຂອງພຣະວິນຍານບໍລິສຸດ, ບໍ່ມີຜູ້ໃດສາມາດຮູ້ໄດ້ວ່າ ພຣະອົງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ. ຫຼັງຈາກທີ່ພຣະວິນຍານບໍລິສຸດເປັນພະຍານໃຫ້ກັບພຣະອົງ, ຖ້າພຣະເຢຊູສືບຕໍ່ປະຕິບັດພາລະກິດໃນລັກສະນະດຽວກັນ ໂດຍບໍ່ມີຄວາມແຕກຕ່າງເລີຍ, ແລ້ວມັນກໍຈະບໍ່ມີຜົນກະທົບແບບນັ້ນ ແລະ ຫຼັກໆແລ້ວ ສິ່ງນີ້ກໍສະແດງເຖິງພາລະກິດຂອງພຣະວິນຍານບໍລິສຸດເຊັ່ນກັນ. ຫຼັງຈາກທີ່ພຣະວິນຍານບໍລິສຸດເປັນພະຍານ, ພຣະວິນຍານບໍລິສຸດກໍສະແດງຕົນເອງ, ເພື່ອວ່າເຈົ້າຈະສາມາດເຫັນໄດ້ຢ່າງຊັດເຈນວ່າພຣະອົງເປັນພຣະເຈົ້າ, ມີພຣະວິນຍານຂອງພຣະເຈົ້າພາຍໃນພຣະອົງ; ຄຳພະຍານຂອງພຣະເຈົ້າບໍ່ໄດ້ຜິດພາດ ແລະ ສິ່ງນີ້ສາມາດພິສູດວ່າຄຳພະຍານຂອງພຣະອົງຖືກຕ້ອງ. ຖ້າພາລະກິດຂອງພຣະອົງກ່ອນ ແລະ ຫຼັງຄຳພະຍານຂອງພຣະວິນຍານບໍລິສຸດເປັນສິ່ງດຽວກັນ, ແລ້ວພັນທະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ພາລະກິດຂອງພຣະວິນຍານບໍລິສຸດກໍຈະບໍ່ໄດ້ຖືກເນັ້ນຄວາມສຳຄັນ ແລະ ສະນັ້ນ ມະນຸດກໍຈະບໍ່ສາມາດຮູ້ຈັກເຖິງພາລະກິດຂອງພຣະວິນຍານບໍລິສຸດ, ຍ້ອນຈະບໍ່ມີຄວາມແຕກຕ່າງທີ່ຊັດເຈນ. ຫຼັງຈາກເປັນພະຍານແລ້ວ, ພຣະວິນຍານບໍລິສຸດກໍສິ່ງເສີມຄຳພະຍານນີ້ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງຕ້ອງສຳແດງສະຕິປັນຍາ ແລະ ສິດອຳນາດຂອງພຣະອົງໃນພຣະເຢຊູ ເຊິ່ງແຕກຕ່າງຈາກເວລາທີ່ຢູ່ໃນອະດີດ. ແນ່ນອນ ນີ້ບໍ່ແມ່ນຜົນຂອງການຮັບບັບຕິດສະມາ; ການຮັບບັບຕິດສະມາເປັນພຽງພິທີກຳ, ພຽງແຕ່ວ່າການຮັບບັບຕິດສະມາເປັນວິທີທີ່ສຳແດງໃຫ້ຮູ້ວ່າມັນເຖິງເວລາທີ່ຈະປະຕິບັດພາລະກິດຂອງພຣະອົງແລ້ວ. ພາລະກິດດັ່ງກ່າວແມ່ນເພື່ອເຮັດໃຫ້ລິດອຳນາດທີ່ຍິ່ງໃຫຍ່ຂອງພຣະເຈົ້າຊັດແຈ້ງ, ເພື່ອເຮັດໃຫ້ຄຳພະຍານຂອງພຣະວິນຍານບໍລິສຸດຊັດເຈນ ແລະ ພຣະວິນຍານບໍລິສຸດຈະຮັບຜິດຊອບສຳລັບຄຳພະຍານນີ້ຈົນເຖິງເວລາສຸດທ້າຍ. ກ່ອນການປະຕິບັດພາລະກິດຂອງພຣະອົງ, ພຣະເຢຊູຍັງໄດ້ຟັງຄຳເທດສະໜາ, ໄດ້ເທດສະໜາ ແລະ ເຜີຍແຜ່ຂ່າວປະເສີດໃນສະຖານທີ່ຕ່າງໆຫຼາຍແຫ່ງ. ພຣະອົງບໍ່ໄດ້ປະຕິບັດພາລະກິດທີ່ຍິ່ງໃຫຍ່ ຍ້ອນເວລາທີ່ພຣະອົງຈະປະຕິບັດພັນທະກິດຂອງພຣະອົງຍັງບໍ່ທັນມາເຖິງ ແລະ ອີກຢ່າງ ຍ້ອນພຣະເຈົ້າເອງໄດ້ເຊື່ອງລີ້ຕົນເອງໃນເນື້ອໜັງຢ່າງຖ່ອມຕົນ ແລະ ບໍ່ໄດ້ປະຕິບັດພາລະກິດໃດເລີຍຈົນເວລາທີ່ເໝາະສົມ. ພຣະອົງບໍ່ໄດ້ປະຕິບັດພາລະກິດກ່ອນການຮັບບັບຕິດສະມາຍ້ອນສອງເຫດຜົນ: ໜຶ່ງແມ່ນເພາະວ່າພຣະວິນຍານບໍລິສຸດບໍ່ໄດ້ລົງມາເທິງພຣະອົງເພື່ອປະຕິບັດ

ພາລະກິດຢ່າງເປັນທາງການ (ນັ້ນໝາຍຄວາມວ່າ ພຣະວິນຍານບໍລິສຸດບໍ່ໄດ້ປະທານລິດອຳນາດ ແລະ ສິດອຳນາດໃຫ້ກັບພຣະເຢຊູເພື່ອປະຕິບັດພາລະກິດດັ່ງກ່າວ) ແລະ ເຖິງແມ່ນພຣະອົງໄດ້ຮູ້ຈັກຕົວຕົນຂອງພຣະອົງເອງ, ພຣະເຢຊູກໍຈະບໍ່ສາມາດປະຕິບັດພາລະກິດທີ່ພຣະອົງເຈດຕະນາຈະປະຕິບັດໃນພາຍຫຼັງໄດ້ ແລະ ຈະຕ້ອງລໍຖ້າຈົນເຖິງມື້ທີ່ພຣະອົງຮັບບັບຕິດສະມາ. ນີ້ບໍ່ແມ່ນເວລາຂອງພຣະເຈົ້າ ແລະ ບໍ່ມີໃຜສາມາດລະເມີດສິ່ງນີ້ໄດ້, ແມ່ນແຕ່ພຣະເຢຊູເອງ; ພຣະເຢຊູເອງກໍບໍ່ສາມາດລົບກວນພາລະກິດຂອງພຣະອົງເອງໄດ້. ແນ່ນອນ ນີ້ແມ່ນຄວາມຖ່ອມຕົນຂອງພຣະເຈົ້າ ແລະ ຍັງເປັນກົດບັນຍັດແຫ່ງພາລະກິດຂອງພຣະເຈົ້າ; ຖ້າພຣະວິນຍານຂອງພຣະເຈົ້າບໍ່ປະຕິບັດພາລະກິດ, ບໍ່ມີໃຜສາມາດປະຕິບັດພາລະກິດຂອງພຣະອົງໄດ້. ເຫດຜົນທີສອງກໍຄື ກ່ອນທີ່ພຣະອົງຈະໄດ້ຮັບບັບຕິດສະມາ, ພຣະອົງເປັນພຽງມະນຸດທຳມະດາ ແລະ ປົກກະຕິ ແລະ ບໍ່ໄດ້ແຕກຕ່າງໄປຈາກຄົນທຳມະດາ ແລະ ຄົນປົກກະຕິອື່ນໆ; ນີ້ແມ່ນລັກສະນະໜຶ່ງຂອງວິທີທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດບໍ່ໄດ້ຢູ່ເໜືອທຳມະຊາດ. ພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ໄດ້ລະເມີດຕໍ່ການຈັດແຈງຂອງພຣະວິນຍານຂອງພຣະເຈົ້າ; ພຣະອົງປະຕິບັດພາລະກິດໃນລັກສະນະທີ່ເປັນລະບຽບ ແລະ ພຣະອົງປະຕິບັດພາລະກິດແບບທຳມະດາຫຼາຍ. ພຽງແຕ່ຫຼັງຈາກການຮັບບັບຕິດສະມາ ພາລະກິດຂອງພຣະອົງຈຶ່ງມີສິດອຳນາດ ແລະ ລິດອຳນາດ. ນັ້ນໝາຍຄວາມວ່າ ເຖິງແມ່ນພຣະອົງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ, ພຣະອົງກໍບໍ່ໄດ້ປະຕິບັດການກະທຳທີ່ຢູ່ເໜືອທຳມະຊາດ ແລະ ພຣະອົງແມ່ນເຕີບໃຫຍ່ໃນລັກສະນະດຽວກັນກັບຄົນທຳມະດາອື່ນໆ. ຖ້າພຣະເຢຊູຮູ້ຈັກຕົວຕົນຂອງພຣະອົງເອງແລ້ວ, ປະຕິບັດພາລະກິດທີ່ຍິ່ງໃຫຍ່ໃນແຜ່ນດິນກ່ອນການຮັບບັບຕິດສະມາຂອງພຣະອົງ ແລະ ແຕກຕ່າງຈາກຄົນທຳມະດາ, ສະແດງວ່າພຣະອົງເປັນຄົນພິເສດ, ແລ້ວບໍ່ແມ່ນແຕ່ມັນຈະເປັນໄປບໍ່ໄດ້ທີ່ຈະໃຫ້ໂຢຮັນປະຕິບັດພາລະກິດຂອງເພິ່ນ, ແຕ່ມັນກໍຍັງຈະບໍ່ມີທາງທີ່ຈະໃຫ້ພຣະເຈົ້າເລີ່ມຕົ້ນຂັ້ນຕອນຕໍ່ໄປຂອງພາລະກິດຂອງພຣະອົງໄດ້. ສະນັ້ນ ສິ່ງນີ້ຈຶ່ງພິສູດວ່າ ສິ່ງທີ່ພຣະເຈົ້າເຮັດແມ່ນຜິດພາດ ແລະ ສຳລັບມະນຸດແລ້ວ ມັນເບິ່ງຄືກັບວ່າ ພຣະວິນຍານຂອງພຣະເຈົ້າ ແລະ ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າບໍ່ໄດ້ມາຈາກແຫຼ່ງກຳເນີດດຽວກັນ. ສະນັ້ນ ພາລະກິດຂອງພຣະເຢຊູທີ່ບັນທຶກໄວ້ໃນພຣະຄຳພີຈຶ່ງເປັນພາລະກິດທີ່ຖືກປະຕິບັດຫຼັງຈາກທີ່ພຣະອົງໄດ້ຮັບບັບຕິດສະມາ, ພາລະກິດທີ່ຖືກປະຕິບັດໃນຊ່ວງເວລາສາມປີ. ພຣະຄຳພີບໍ່ໄດ້ບັນທຶກເຖິງສິ່ງທີ່ພຣະອົງເຮັດກ່ອນທີ່ພຣະອົງຈະໄດ້ຮັບບັບຕິດສະມາ ເພາະພຣະອົງບໍ່ໄດ້ປະຕິບັດພາລະກິດນີ້ກ່ອນທີ່ພຣະອົງໄດ້ຮັບບັບຕິດສະມາ. ພຣະອົງເປັນພຽງມະນຸດປົກກະຕິ ແລະ ເປັນຕົວແທນໃຫ້ກັບມະນຸດປົກກະຕິ; ກ່ອນທີ່ພຣະເຢຊູເລີ່ມປະຕິບັດພັນທະກິດຂອງພຣະອົງ, ພຣະອົງກໍບໍ່ໄດ້ແຕກຕ່າງຈາກຄົນປົກກະຕິ ແລະ ຜູ້ຄົນກໍບໍ່ສາມາດເຫັນຄວາມແຕກຕ່າງທີ່ຢູ່ໃນພຣະອົງ. ພຽງແຕ່ຫຼັງຈາກທີ່ພຣະອົງຮອດອາຍຸ 29 ປີ, ພຣະເຢຊູຈຶ່ງຮູ້ວ່າພຣະອົງໄດ້ມາເພື່ອເຮັດໃຫ້ຂັ້ນຕອນແຫ່ງພາລະກິດຂອງພຣະເຈົ້າສຳເລັດລົງ; ເມື່ອກ່ອນ, ພຣະອົງເອງກໍບໍ່ຮູ້ສິ່ງນີ້ ຍ້ອນພາລະກິດທີ່ພຣະເຈົ້າປະຕິບັດແມ່ນບໍ່ໄດ້ຢູ່ເໜືອທຳມະຊາດ. ເມື່ອພຣະອົງເຂົ້າຮ່ວມການຊຸມນຸມໃນທຳມະສາລາຕອນອາຍຸສິບສອງປີ, ມາຣີອາກຳລັງຊອກຫາພຣະອົງ ແລະ ພຣະອົງພຽງແຕ່ເວົ້າໜຶ່ງປະໂຫຍກ ໃນລັກສະນະດຽວກັນກັບເດັກນ້ອຍຄົນອື່ນໆວ່າ: "ແມ່ເອີຍ!

ທ່ານບໍ່ຮູ້ບໍວ່າເຮົາຕ້ອງໃຫ້ຄວາມປະສົງຂອງພຣະບິດາຂອງເຮົາຢູ່ເໜືອສິ່ງອື່ນໃດທັງໝົດ?" ແນ່ນອນ ຍ້ອນພຣະອົງຖືກປະຕິສົນທິຈາກພຣະວິນຍານບໍລິສຸດ, ພຣະເຢຊູຈະບໍ່ພິເສດໃນລັກສະນະໃດໜຶ່ງບໍ? ແຕ່ຄວາມພິເສດຂອງພຣະອົງບໍ່ໄດ້ໝາຍຄວາມວ່າ ພຣະອົງຢູ່ເໜືອທຳມະຊາດ, ພຽງແຕ່ວ່າພຣະອົງຮັກພຣະເຈົ້າຫຼາຍກວ່າເດັກໜຸ່ມນ້ອຍຄົນອື່ນໆ. ເຖິງແມ່ນພຣະອົງເປັນມະນຸດໃນລັກສະນະພາຍນອກ, ແກ່ນແທ້ຂອງພຣະອົງກໍຍັງພິເສດ ແລະ ແຕກຕ່າງຈາກຄົນອື່ນ. ຢ່າງໃດກໍຕາມ ພຽງແຕ່ຫຼັງຈາກການຮັບບັບຕິດສະມາ ພຣະອົງຈຶ່ງຮູ້ສຶກແທ້ວ່າພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດໃນຕົວພຣະອົງ, ຮູ້ສຶກວ່າພຣະອົງເປັນພຣະເຈົ້າເອງ. ຫຼັງຈາກເມື່ອພຣະອົງຮອດອາຍຸ 33 ປີເທົ່ານັ້ນ ພຣະອົງຈຶ່ງເຂົ້າໃຈຢ່າງແທ້ຈິງວ່າ ພຣະວິນຍານບໍລິສຸດເຈດຕະນາທີ່ຈະປະຕິບັດພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນຜ່ານທາງພຣະອົງ. ຕອນອາຍຸ 32 ປີ, ພຣະອົງໄດ້ມາເພື່ອຮູ້ຈັກຄວາມຈິງພາຍໃນບາງຢ່າງ, ຕາມທີ່ໄດ້ຖືກຂຽນໄວ້ໃນພຣະກິດຕິຄຸນມັດທາຍວ່າ: "ແລະ ຊີໂມນ ເປໂຕ ໄດ້ຕອບ ແລະ ເວົ້າວ່າ ທ່ານເປັນພຣະຄຣິດ, ເປັນພຣະບຸດຂອງພຣະເຈົ້າຜູ້ມີຊີວິດຢູ່..." (ມັດທາຍ 16:16) ແລະ "ຈາກເວລານັ້ນເປັນຕົ້ນມາ ພຣະເຢຊູເລີ່ມສະແດງໃຫ້ສາວົກຂອງພຣະອົງເຫັນວ່າ ພຣະອົງຕ້ອງໄປທີ່ເຢລູຊາເລັມ ແລະ ທົນທຸກທໍລະມານຫຼາຍປະການຈາກພວກເຖົ້າແກ່ ແລະ ປະໂລຫິດໃຫຍ່ ແລະ ພວກນັກທຳ ແລ້ວຖືກຂ້າ ແລະ ຟື້ນຄືນມາໃນມື້ທີ່ສາມ" (ມັດທາຍ 16:21). ພຣະອົງບໍ່ໄດ້ຮູ້ລ່ວງໜ້າວ່າພຣະອົງຕ້ອງປະຕິບັດພາລະກິດຫຍັງ ແຕ່ຮູ້ພຽງເວລາສະເພາະ. ພຣະອົງບໍ່ຮູ້ຈັກຢ່າງແທ້ຈິງວ່າ ທັນທີທີ່ພຣະອົງເກີດມາ ພຣະວິນຍານບໍລິສຸດກໍປະຕິບັດພາລະກິດໃນພຣະອົງເທື່ອລະໜ້ອຍ ແລະ ມີຂະບວນການສຳລັບພາລະກິດນັ້ນ. ໃນຕອນເລີ່ມຕົ້ນ ຖ້າພຣະອົງຮູ້ຈັກວ່າພຣະອົງເປັນພຣະເຈົ້າ, ເປັນພຣະຄຣິດ ແລະ ບຸດມະນຸດທີ່ບັງເກີດເປັນມະນຸດ, ພຣະອົງຕ້ອງເຮັດໃຫ້ພາລະກິດແຫ່ງການຖືກຄຶງເທິງໄມ້ກາງແຂນສຳເລັດລົງ, ແລ້ວເປັນຫຍັງພຣະອົງຈຶ່ງບໍ່ປະຕິບັດກ່ອນໜ້ານັ້ນ? ເປັນຫຍັງພຣະເຢຊູຈຶ່ງຮູ້ສຶກໂສກເສົ້າ ແລະ ອະທິຖານຢ່າງຈິງຈັງສຳລັບເລື່ອງນີ້ ຫຼັງຈາກທີ່ບອກສາວົກຂອງພຣະອົງກ່ຽວກັບພັນທະກິດຂອງພຣະອົງ? ເປັນຫຍັງໂຢຮັນຈຶ່ງເປີດທົນທາງໃຫ້ກັບພຣະອົງ ແລະ ໃຫ້ບັບຕິດສະມາແກ່ພຣະອົງ ກ່ອນທີ່ພຣະອົງຈະໄດ້ມາເຂົ້າໃຈຫຼາຍສິ່ງທີ່ພຣະອົງຍັງບໍ່ເຂົ້າໃຈ? ສິ່ງນີ້ພິສູດໃຫ້ເຫັນວ່າມັນຄືພາລະກິດຂອງພຣະເຈົ້າທີ່ບັງເກີດໃນເນື້ອໜັງ ແລະ ສະນັ້ນ ເພື່ອທີ່ຈະໃຫ້ພຣະອົງເຂົ້າໃຈ ແລະ ບັນລຸໄດ້, ມັນກໍມີຂະບວນການ ຍ້ອນພຣະອົງເປັນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ຜູ້ເຊິ່ງມີພາລະກິດທີ່ແຕກຕ່າງຈາກພາລະກິດທີ່ພຣະວິນຍານປະຕິບັດໂດຍກົງ.

ທຸກຂັ້ນຕອນຂອງພາລະກິດຂອງພຣະເຈົ້າປະຕິບັດຕາມກະແສໜຶ່ງດຽວກັນ ແລະ ສະນັ້ນ ໃນແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າ, ແຕ່ລະຂັ້ນຕອນແມ່ນຕິດຕໍ່ກັນຢ່າງໃກ້ຊິດ, ຈາກການສ້າງໂລກຈົນມາເຖິງປັດຈຸບັນ. ຖ້າບໍ່ມີໃຜປູທົນທາງ, ແລ້ວກໍຈະບໍ່ມີໃຜຕາມມາ; ຍ້ອນມີຄົນຕາມມາ, ຈຶ່ງມີຄົນປູເສັ້ນທາງ. ໃນວິທີນີ້ ພາລະກິດຈຶ່ງຖືກສົ່ງຜ່ານຕໍ່ແຕ່ລະຂັ້ນຕອນ. ຂັ້ນຕອນໜຶ່ງຕາມຫຼັງອີກຂັ້ນຕອນໜຶ່ງ ແລະ ຫາກບໍ່ມີໃຜເປີດທົນທາງ ມັນກໍເປັນໄປບໍ່ໄດ້ທີ່ຈະເລີ່ມຕົ້ນພາລະກິດ ແລະ ພຣະເຈົ້າກໍຈະບໍ່ມີທາງດຳເນີນພາລະກິດຂອງພຣະອົງໄປຂ້າງໜ້າໄດ້. ບໍ່ມີຂັ້ນຕອນໃດຂັດຕໍ່ຂັ້ນຕອນໃດ ແລະ

ແຕ່ລະຂັ້ນຕອນກໍຕາມມາດ້ວຍອີກຂັ້ນຕອນໜຶ່ງເພື່ອກໍ່ສ້າງເປັນກະແສ; ສິ່ງນີ້ແມ່ນລ້ວນແລ້ວແຕ່ຖືກປະຕິບັດໂດຍພຣະວິນຍານອົງດຽວ. ແຕ່ບໍ່ວ່າບຸກຄົນໃດຈະເປີດຫົນທາງ ຫຼື ປະຕິບັດພາລະກິດໃດກໍຕາມ, ສິ່ງນີ້ບໍ່ໄດ້ກຳນົດຕົວຕົນຂອງພວກເຂົາ. ແລ້ວສິ່ງນີ້ບໍ່ຖືກຕ້ອງບໍ? ໂຢຮັນເປີດຫົນທາງ ແລະ ພຣະເຢຊູເປັນຜູ້ສືບຕໍ່ພາລະກິດຂອງເພິ່ນ, ແລ້ວສິ່ງນີ້ພິສູດວ່າຕົວຕົນຂອງພຣະເຢຊູແມ່ນຕໍ່າຕ້ອຍກວ່າຕົວຕົນຂອງໂຢຮັນບໍ? ພຣະເຢໂຮວາປະຕິບັດພາລະກິດຂອງພຣະອົງກ່ອນພຣະເຢຊູ, ແລ້ວເຈົ້າສາມາດເວົ້າໄດ້ບໍວ່າ ພຣະເຢໂຮວາຍິ່ງໃຫຍ່ກວ່າພຣະເຢຊູ? ບໍ່ວ່າພວກເຂົາປູທາງ ຫຼື ສືບຕໍ່ພາລະກິດຂອງຄົນອື່ນກໍຕາມ ບໍ່ແມ່ນເລື່ອງສຳຄັນ; ສິ່ງທີ່ສຳຄັນທີ່ສຸດແມ່ນແກ່ນແທ້ໃນພາລະກິດຂອງພວກເຂົາ ແລະ ຕົວຕົນທີ່ມັນເປັນຕົວແທນໃຫ້. ສິ່ງນີ້ບໍ່ຖືກຕ້ອງບໍ? ຍ້ອນພຣະເຈົ້າເຈດຕະນາປະຕິບັດພາລະກິດທ່າມກາງມະນຸດ, ພຣະອົງຈຶ່ງຕ້ອງຍົກຄົນທີ່ສາມາດປະຕິບັດພາລະກິດແຫ່ງການປູທາງຂຶ້ນ. ເມື່ອໂຢຮັນຫາກໍ່ເລີ່ມເທດສະໜາ, ເພິ່ນກໍໄດ້ກ່າວວ່າ: "ເຈົ້າຈົ່ງຈັດກຽມຫົນທາງຂອງພຣະຜູ້ເປັນເຈົ້າ, ຈົ່ງເຮັດໃຫ້ເສັ້ນທາງຂອງພຣະອົງຊື່ໄປ". "ພວກເຈົ້າຈົ່ງສຳນຶກຜິດ ຍ້ອນອານາຈັກແຫ່ງສະຫວັນໃກ້ມາເຖິງແລ້ວ". ເພິ່ນເວົ້າແບບນັ້ນຕັ້ງແຕ່ຕອນເລີ່ມຕົ້ນ ແລ້ວເປັນຫຍັງເພິ່ນຈຶ່ງສາມາດເວົ້າຄຳເວົ້າເຫຼົ່ານີ້? ໃນເລື່ອງລຳດັບຂອງການເວົ້າຄຳເວົ້າເຫຼົ່ານັ້ນອອກມາ, ໂຢຮັນເປັນຜູ້ກ່າວຂ່າວປະເສີດແຫ່ງອານາຈັກສະຫວັນກ່ອນ ແລະ ພຣະເຢຊູກໍກ່າວຫຼັງຈາກນັ້ນ. ອີງຕາມແນວຄິດຂອງມະນຸດແລ້ວ, ເປັນໂຢຮັນທີ່ເປີດເສັ້ນທາງໃໝ່ ແລະ ສະນັ້ນ ແນ່ນອນ ຈຶ່ງເປັນໂຢຮັນທີ່ຍິ່ງໃຫຍ່ກວ່າພຣະເຢຊູ. ແຕ່ໂຢຮັນບໍ່ໄດ້ເວົ້າວ່າເພິ່ນເປັນພຣະຄຣິດ ແລະ ພຣະເຈົ້າກໍບໍ່ໄດ້ເປັນພະຍານໃຫ້ກັບເພິ່ນວ່າເປັນພຣະບຸດອັນເປັນທີ່ຮັກຂອງພຣະເຈົ້າ, ແຕ່ ພຽງແຕ່ໃຊ້ເພິ່ນເພື່ອເປີດຫົນທາງ ແລະ ຈັດກຽມຫົນທາງໃຫ້ກັບພຣະຜູ້ເປັນເຈົ້າ. ເພິ່ນປູທາງໃຫ້ກັບພຣະເຢຊູ, ແຕ່ ເພິ່ນບໍ່ສາມາດປະຕິບັດພາລະກິດແທນພຣະເຢຊູໄດ້. ພາລະກິດທຸກຢ່າງຂອງມະນຸດຍັງຖືກຄວບຄຸມໂດຍພຣະວິນຍານບໍລິສຸດເຊັ່ນກັນ.

ໃນຍຸກແຫ່ງພຣະສັນຍາເດີມ, ເປັນພຣະເຢໂຮວາທີ່ນຳທາງ ແລະ ພາລະກິດຂອງພຣະເຢໂຮວາກໍເປັນຕົວແທນໃຫ້ກັບຍຸກແຫ່ງພຣະສັນຍາເດີມທັງໝົດ ແລະ ພ້ອມທັງພາລະກິດທັງໝົດທີ່ເກີດຂຶ້ນໃນອິດສະຣາເອນ. ໂມເຊພຽງແຕ່ສົ່ງເສີມພາລະກິດນີ້ເທິງແຜ່ນດິນໂລກ ແລະ ການກະທຳຂອງເພິ່ນກໍຖືວ່າເປັນການຮ່ວມມືຈາກມະນຸດ. ໃນເວລານັ້ນ ແມ່ນພຣະເຢໂຮວາເປັນຜູ້ກ່າວ ແລະ ເອີ້ນໂມເຊ ແລະ ພຣະອົງຍົກໂມເຊຂຶ້ນທ່າມກາງປະຊາຊົນອິດສະຣາເອນ ແລະ ເຮັດໃຫ້ເພິ່ນນຳພາພວກເຂົາສູ່ຖິ່ນແຫ້ງແລ້ງກັນດານ ແລະ ສືບຕໍ່ໄປທີ່ການາອານ. ນີ້ບໍ່ແມ່ນພາລະກິດຂອງໂມເຊເອງ, ແຕ່ເປັນພາລະກິດທີ່ພຣະເຢໂຮວາເປັນຜູ້ຊີ້ນຳດ້ວຍຕົວພຣະອົງເອງ ແລະ ສະນັ້ນ ໂມເຊແມ່ນບໍ່ສາມາດຖືກເອີ້ນວ່າພຣະເຈົ້າໄດ້. ໂມເຊຍັງກຳນົດບັນຍັດ, ແຕ່ກົດບັນຍັດນີ້ແມ່ນຖືກບັນຍັດໂດຍພຣະເຢໂຮວາເອງ. ພຽງແຕ່ພຣະອົງໃຫ້ໂມເຊສະແດງມັນອອກມາ. ພຣະເຢຊູກໍສ້າງພຣະບັນຍັດເຊັ່ນກັນ ແລະ ພຣະອົງລົບລ້າງກົດບັນຍັດຂອງພຣະສັນຍາເດີມ ແລະ ກຳນົດພຣະບັນຍັດສຳລັບຍຸກໃໝ່. ເປັນຫຍັງພຣະເຢຊູຈຶ່ງເປັນພຣະເຈົ້າເອງ? ເພາະສິ່ງນີ້ແມ່ນແຕກຕ່າງກັນ. ໃນເວລານັ້ນ ພາລະກິດທີ່ໂມເຊປະຕິບັດແມ່ນບໍ່ໄດ້ເປັນຕົວແທນໃຫ້ກັບຍຸກດັ່ງກ່າວ ຫຼື ມັນບໍ່ໄດ້ເປີດຫົນທາງໃໝ່; ພຣະເຢໂຮວາຊີ້ນຳເພິ່ນຢູ່ເບື້ອງຫຼັງ ແລະ ເພິ່ນກໍເປັນ

ພຽງຄົນທີ່ຖືກພຣະເຈົ້າໃຊ້. ເມື່ອພຣະເຢຊູມາ, ໂຢຮັນກໍປະຕິບັດຂັ້ນຕອນໃນພາລະກິດຂອງການປູທາງ ແລະ ເລີ່ມຕົ້ນເຜີຍແຜ່ຂ່າວປະເສີດແຫ່ງອານາຈັກສະຫວັນ (ພຣະວິນຍານບໍລິສຸດໄດ້ເລີ່ມຕົ້ນສິ່ງນີ້). ເມື່ອພຣະເຢຊູມາ, ພຣະອົງກໍປະຕິບັດພາລະກິດຂອງພຣະອົງເອງໂດຍກົງ, ແຕ່ມີຄວາມແຕກຕ່າງກັນຢ່າງໃຫຍ່ຫຼວງລະຫວ່າງພາລະກິດຂອງພຣະອົງ ແລະ ພາລະກິດຂອງໂມເຊ. ເອຊາຢາກໍໄດ້ກ່າວຄຳທຳນາຍຫຼາຍຢ່າງ, ແຕ່ເປັນຫຍັງເພິ່ນຈຶ່ງບໍ່ເປັນພຣະເຈົ້າເອງ? ພຣະເຢຊູບໍ່ໄດ້ກ່າວຄຳທຳນາຍຫຼາຍຢ່າງ, ແຕ່ເປັນຫຍັງພຣະອົງຈຶ່ງເປັນພຣະເຈົ້າເອງ? ບໍ່ມີໃຜກ້າເວົ້າວ່າ ພາລະກິດຂອງພຣະເຢຊູໃນເວລານັ້ນມາຈາກພຣະວິນຍານບໍລິສຸດທັງໝົດ ຫຼື ພວກເຂົາກ້າເວົ້າວ່າ ມັນມາຈາກຄວາມປະສົງຂອງມະນຸດທັງໝົດ ຫຼື ມັນເປັນພາລະກິດຂອງພຣະເຈົ້າເອງທັງໝົດ. ມະນຸດບໍ່ມີທາງວິເຄາະສິ່ງດັ່ງກ່າວໄດ້. ມັນສາມາດເວົ້າໄດ້ວ່າ ເອຊາຢາປະຕິບັດພາລະກິດດັ່ງກ່າວ ແລະ ກ່າວຄຳທຳນາຍດັ່ງກ່າວ ແລະ ສິ່ງເຫຼົ່ານັ້ນລ້ວນແລ້ວແຕ່ມາຈາກພຣະວິນຍານບໍລິສຸດ; ພວກມັນບໍ່ໄດ້ມາຈາກເອຊາຢາໂດຍກົງ, ແຕ່ເປັນການເປີດເຜີຍຂອງພຣະເຢໂຮວາ. ພຣະເຢຊູບໍ່ໄດ້ປະຕິບັດພາລະກິດຈຳນວນຫຼວງຫຼາຍ ແລະ ບໍ່ໄດ້ກ່າວພຣະທຳຫຼາຍຂໍ້ ຫຼື ພຣະອົງບໍ່ໄດ້ກ່າວຄຳທຳນາຍຫຼາຍຢ່າງ. ສຳລັບມະນຸດແລ້ວ ການເທດສະໜາຂອງພຣະອົງບໍ່ໄດ້ເບິ່ງຄືກັບວ່າສູງສົ່ງເປັນພິເສດ, ແຕ່ພຣະອົງກໍເປັນພຣະເຈົ້າເອງ ແລະ ມະນຸດກໍບໍ່ສາມາດອະທິບາຍສິ່ງນີ້ໄດ້. ບໍ່ມີໃຜເຄີຍເຊື່ອໃນໂຢຮັນ ຫຼື ເອຊາຢາ ຫຼື ເດວິດ ຫຼື ບໍ່ມີໃຜເຄີຍເອີ້ນພວກເພິ່ນວ່າພຣະເຈົ້າ ຫຼື ເດວິດຜູ້ເຊິ່ງເປັນພຣະເຈົ້າ ຫຼື ໂຢຮັນຜູ້ເຊິ່ງເປັນພຣະເຈົ້າ; ບໍ່ມີໃຜເຄີຍເວົ້າແບບນັ້ນ ແລະ ມີພຽງແຕ່ພຣະເຢຊູເທົ່ານັ້ນທີ່ຖືກເອີ້ນວ່າພຣະຄຣິດ. ການຈັດປະເພດແບບນີ້ແມ່ນຖືກສ້າງຂຶ້ນຕາມຄຳພະຍານຂອງພຣະເຈົ້າ, ພາລະກິດທີ່ພຣະອົງຮັບ ແລະ ພັນທະກິດທີ່ພຣະອົງປະຕິບັດ. ເມື່ອເວົ້າເຖິງບຸກຄົນທີ່ຍິ່ງໃຫຍ່ໃນພຣະຄຳພີ ເຊັ່ນ: ອັບຣາຮາມ, ເດວິດ, ໂຢຊວຍ, ດານີເອນ, ອາຊາຢາ, ໂຢຮັນ ແລະ ພຣະເຢຊູ, ຜ່ານທາງພາລະກິດທີ່ພວກເຂົາປະຕິບັດ, ເຈົ້າສາມາດບອກໄດ້ວ່າຜູ້ໃດແມ່ນພຣະເຈົ້າເອງ ແລະ ຜູ້ປະກາດພຣະທຳແມ່ນຄົນປະເພດໃດ ແລະ ອັກຄະສາວົກແມ່ນປະເພດໃດ. ຜູ້ໃດຖືກພຣະເຈົ້າໃຊ້ ແລະ ຜູ້ໃດແມ່ນພຣະເຈົ້າເອງ, ສິ່ງເຫຼົ່ານີ້ແມ່ນຈຳແນກ ແລະ ກຳນົດໂດຍແກ່ນແທ້ ແລະ ປະເພດຂອງພາລະກິດທີ່ພວກເຂົາປະຕິບັດ. ຖ້າເຈົ້າບໍ່ສາມາດບອກເຖິງຄວາມແຕກຕ່າງ, ແລ້ວສິ່ງນີ້ກໍພິສູດວ່າເຈົ້າບໍ່ຮູ້ຈັກການເຊື່ອໃນພຣະເຈົ້າໝາຍຄວາມວ່າແນວໃດ. ພຣະເຢຊູເປັນພຣະເຈົ້າ ເພາະພຣະອົງກ່າວພຣະທຳຫຼາຍຂໍ້ ແລະ ປະຕິບັດພາລະກິດຫຼາຍຢ່າງ ໂດຍສະເພາະແມ່ນການສະແດງສິ່ງອັດສະຈັນຫຼາຍຢ່າງຂອງພຣະອົງ. ໃນທຳນອງດຽວກັນ, ໂຢຮັນກໍປະຕິບັດພາລະກິດຫຼາຍຢ່າງ ແລະ ກ່າວຄຳເວົ້າຫຼາຍຢ່າງ, ໂມເຊກໍເຊັ່ນດຽວກັນ; ເປັນຫຍັງພວກເຂົາຈຶ່ງບໍ່ຖືກເອີ້ນວ່າພຣະເຈົ້າ? ອາດາມຖືກສ້າງໂດຍພຣະເຈົ້າໂດຍກົງ; ເປັນຫຍັງເພິ່ນຈຶ່ງບໍ່ຖືກເອີ້ນວ່າພຣະເຈົ້າ ກົງກັນຂ້າມ ເພິ່ນຖືກເອີ້ນພຽງແຕ່ວ່າສິ່ງຖືກສ້າງເທົ່ານັ້ນ? ຖ້າບາງຄົນເວົ້າກັບເຈົ້າວ່າ: "ໃນປັດຈຸບັນ ພຣະເຈົ້າໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍ ແລະ ກ່າວພຣະທຳຫຼາຍຂໍ້; ພຣະອົງເປັນພຣະເຈົ້າເອງ. ແລ້ວຍ້ອນໂມເຊກ່າວພຣະທຳຢ່າງຫຼວງຫຼາຍ, ເພິ່ນກໍຕ້ອງເປັນພຣະເຈົ້າເຊັ່ນກັນ!" ເຈົ້າຄວນຖາມພວກເຂົາຄືນວ່າ "ໃນເວລານັ້ນ ເປັນຫຍັງພຣະເຈົ້າຈຶ່ງເປັນພະຍານໃຫ້ກັບພຣະເຢຊູວ່າເປັນພຣະເຈົ້າເອງ ແລະ ບໍ່ແມ່ນໂຢຮັນ? ໂຢຮັນບໍ່ໄດ້

ມາກ່ອນພຣະເຢຊູບໍ? ພາລະກິດຂອງຜູ້ໃດຍິ່ງໃຫຍ່ກວ່າກັນ ຂອງໂຢຮັນ ຫຼື ຂອງພຣະເຢຊູ? ສຳລັບມະນຸດແລ້ວ, ພາລະກິດຂອງໂຢຮັນຍິ່ງໃຫຍ່ກວ່າພາລະກິດຂອງພຣະເຢຊູ, ແຕ່ເປັນຫຍັງພຣະວິນຍານບໍລິສຸດຈຶ່ງເປັນພະຍານໃຫ້ກັບພຣະເຢຊູ ແລະ ບໍ່ແມ່ນໂຢຮັນ?" ສິ່ງດຽວກັນກຳລັງເກີດຂຶ້ນໃນປັດຈຸບັນນີ້! ໃນເວລານັ້ນ ເມື່ອໂມເຊນຳປະຊາຊົນອິດສະຣາເອນ, ພຣະເຢໂຮວາກໍກ່າວຕໍ່ເພິ່ນຈາກທ່າມກາງກ້ອນເມກ. ໂມເຊບໍ່ໄດ້ກ່າວໂດຍກົງ, ແຕ່ກົງກັນຂ້າມ ເພິ່ນຖືກນຳພາໂດຍພຣະເຢໂຮວາໂດຍກົງ. ນີ້ແມ່ນພາລະກິດຂອງອິດສະຣາເອນໃນພຣະສັນຍາເດີມ. ພາຍໃນຕົວຂອງໂມເຊແມ່ນບໍ່ໄດ້ມີພຣະວິນຍານ ຫຼື ການເປັນຢູ່ຂອງພຣະເຈົ້າ. ເພິ່ນບໍ່ສາມາດປະຕິບັດພາລະກິດນັ້ນ ແລະ ສະນັ້ນຈຶ່ງມີຄວາມແຕກຕ່າງຢ່າງໃຫຍ່ລະຫວ່າງພາລະກິດທີ່ເພິ່ນປະຕິບັດ ແລະ ພາລະກິດທີ່ພຣະເຢຊູປະຕິບັດ. ນັ້ນຍ້ອນວ່າພາລະກິດທີ່ພວກເຂົາປະຕິບັດແມ່ນແຕກຕ່າງກັນ! ບໍ່ວ່າມະນຸດຄົນໃດຄົນໜຶ່ງຈະຖືກພຣະເຈົ້າໃຊ້ ຫຼື ເປັນຜູ້ປະກາດພຣະທຳ, ອັກຄະສາວົກ ຫຼື ພຣະເຈົ້າເອງ, ສິ່ງເຫຼົ່ານີ້ແມ່ນສາມາດແຍກແຍະໂດຍທຳມະຊາດຂອງພາລະກິດຂອງເຂົາ ແລະ ສິ່ງນີ້ຈະສິ້ນສຸດຂໍ້ສົງໄສຂອງເຈົ້າ. ໃນພຣະຄຳພີ ມັນຖືກຂຽນໄວ້ວ່າ ມີພຽງພຣະເມສານ້ອຍເທົ່ານັ້ນທີ່ສາມາດເປີດຕາປະທັບທັງເຈັດໄດ້. ທົ່ວຍຸກຕ່າງໆແມ່ນໄດ້ມີຜູ້ອະທິບາຍເຖິງຂໍ້ພຣະຄຳພີຫຼາຍຄົນທ່າມກາງບຸກຄົນທີ່ຍິ່ງໃຫຍ່ເຫຼົ່ານັ້ນ ແລະ ແລ້ວເຈົ້າສາມາດເວົ້າໄດ້ບໍວ່າພວກເຂົາທຸກຄົນເປັນພຣະເມສານ້ອຍໝົດ? ເຈົ້າສາມາດເວົ້າໄດ້ບໍວ່າການອະທິບາຍຂອງພວກເຂົາລ້ວນແລ້ວແຕ່ມາຈາກພຣະເຈົ້າ? ພວກເຂົາເປັນພຽງຜູ້ອະທິບາຍ; ພວກເຂົາບໍ່ມີຕົວຕົນຂອງພຣະເມສານ້ອຍ. ພວກເຂົາຈະສົມຄວນເປີດຕາປະທັບທັງເຈັດໄດ້ແນວໃດ? ມັນເປັນຄວາມຈິງທີ່ວ່າ "ມີພຽງແຕ່ພຣະເມສານ້ອຍເທົ່ານັ້ນທີ່ສາມາດເປີດຕາປະທັບທັງເຈັດ", ແຕ່ພຣະອົງບໍ່ໄດ້ມາເພື່ອເປີດຕາປະທັບທັງເຈັດເທົ່ານັ້ນ; ບໍ່ຈຳເປັນໃນພາລະກິດນີ້, ມັນເກີດຂຶ້ນໂດຍບັງເອີນ. ພຣະອົງແມ່ນຊັດເຈນກ່ຽວກັບພາລະກິດຂອງພຣະອົງເອງ; ມັນຈຳເປັນສຳລັບພຣະອົງບໍທີ່ຈະໃຊ້ເວລາຢ່າງຫຼວງຫຼາຍໃນການຕີຄວາມໝາຍຂໍ້ພຣະຄຳພີ? "ຍຸກຂອງພຣະເມສານ້ອຍຕີຄວາມໝາຍຂໍ້ພຣະຄຳພີ" ຕ້ອງໄດ້ເພີ່ມເຂົ້າໃນແຜນການຫົກພັນປີບໍ? ພຣະອົງມາເພື່ອປະຕິບັດພາລະກິດໃໝ່, ແຕ່ພຣະອົງກໍຍັງໃຫ້ການເປີດເຜີຍບາງຢ່າງກ່ຽວກັບພາລະກິດໃນອະດີດ, ເຮັດໃຫ້ຜູ້ຄົນເຂົ້າໃຈຄວາມຈິງແຫ່ງພາລະກິດຫົກພັນປີ. ບໍ່ຈຳເປັນຕ້ອງອະທິບາຍຂໍ້ຄວາມຈາກພຣະຄຳພີຫຼາຍເກີນໄປ; ມັນຄືພາລະກິດໃນປັດຈຸບັນທີ່ເປັນກະແຈທີ່ສຳຄັນ. ເຈົ້າຄວນຮູ້ວ່າພຣະເຈົ້າບໍ່ໄດ້ມາເພື່ອທຳລາຍຕາປະທັບທັງເຈັດໂດຍສະເພາະ, ແຕ່ເພື່ອປະຕິບັດພາລະກິດແຫ່ງຄວາມລອດພົ້ນ.

ເຈົ້າພຽງແຕ່ຮູ້ວ່າ ພຣະເຢຊູຈະລົງມາໃນລະຫວ່າງຍຸກສຸດທ້າຍ, ແຕ່ພຣະອົງຈະລົງມາແນວໃດແທ້? ຄົນບາບແບບພວກເຈົ້າ ຜູ້ທີ່ຫາກໍຖືກໄຖ່ບາບ ແລະ ຍັງບໍ່ໄດ້ປ່ຽນແປງ ຫຼື ຖືກພຣະເຈົ້າເຮັດໃຫ້ສົມບູນ, ເຈົ້າຈະເປັນທີ່ພໍໃຈພຣະເຈົ້າໄດ້ບໍ? ສຳລັບເຈົ້າທີ່ຍັງມີຕົວຕົນເກົ່າຂອງເຈົ້າ, ມັນຄືຄວາມຈິງທີ່ເຈົ້າຖືກພຣະເຢຊູຊ່ວຍໃຫ້ລອດພົ້ນ ແລະ ເຈົ້າບໍ່ຖືກນັບວ່າເປັນຄົນບາບ ຍ້ອນຄວາມລອດພົ້ນຂອງພຣະເຈົ້າ, ແຕ່ສິ່ງນີ້ບໍ່ໄດ້ພິສູດວ່າເຈົ້າບໍ່ມີຄວາມບາບ ແລະ ບໍລິສຸດແລ້ວ. ເຈົ້າຈະບໍລິສຸດໄດ້ແນວໃດ ຖ້າເຈົ້າຍັງບໍ່ໄດ້ປ່ຽນແປງ? ຢູ່ພາຍໃນຕົວເຈົ້າ, ເຈົ້າຖືກອ້ອມລ້ອມໄປດ້ວຍຄວາມບໍ່ບໍລິສຸດ, ຄວາມເຫັນ

ແກ່ຕົວ ແລະ ຄວາມໂຫດຮ້າຍ, ແຕ່ເຈົ້າກໍຍັງປາຖະໜາທີ່ຈະລົງມາພ້ອມກັບພຣະເຢຊູ, ເຈົ້າຄືຈະບໍ່ໂຊກດີຫຼາຍປານນັ້ນ! ເຈົ້າພາດຂັ້ນຕອນໜຶ່ງໃນຄວາມເຊື່ອຂອງເຈົ້າໃນພຣະເຈົ້າ: ເຈົ້າພຽງແຕ່ຖືກໄຖ່ບາບ, ແຕ່ຍັງບໍ່ໄດ້ຖືກປ່ຽນແປງ. ເພື່ອຈະໃຫ້ເຈົ້າເປັນທີ່ພໍໃຈພຣະເຈົ້າ, ພຣະເຈົ້າຕ້ອງປະຕິບັດພາລະກິດແຫ່ງການປ່ຽນແປງ ແລະ ການຊໍາລະເຈົ້າດ້ວຍຕົວພຣະອົງເອງ; ຖ້າເຈົ້າພຽງແຕ່ຖືກໄຖ່ບາບ, ເຈົ້າຈະບໍ່ສາມາດບັນລຸຄວາມບໍລິສຸດໄດ້. ໃນວິທີນີ້ ເຈົ້າຈະບໍ່ມີຄຸນສົມບັດທີ່ຈະໄດ້ຮັບສ່ວນແບ່ງໃນພອນທີ່ປະເສີດຂອງພຣະເຈົ້າ, ຍ້ອນເຈົ້າໄດ້ພາດຂັ້ນຕອນໜຶ່ງໃນພາລະກິດແຫ່ງການຄຸ້ມຄອງມະນຸດຂອງພຣະເຈົ້າ ເຊິ່ງເປັນຂັ້ນຕອນສຳຄັນໃນການປ່ຽນແປງ ແລະ ເຮັດໃຫ້ມະນຸດສົມບູນ. ດ້ວຍເຫດນັ້ນເຈົ້າເຊິ່ງເປັນຄົນບາບທີ່ຫາກໍຖືກໄຖ່ ແມ່ນບໍ່ສາມາດຮັບເອົາມໍລະດົກຂອງພຣະເຈົ້າໂດຍກົງ.

ຫາກປາສະຈາກການເລີ່ມຕົ້ນຂອງຂັ້ນຕອນໃໝ່ນີ້ຂອງພາລະກິດ, ໃຜແດ່ຈະຮູ້ວ່າພວກເຈົ້າທີ່ເປັນນັກປະກາດຂ່າວປະເສີດ, ນັກເທດສະໜາ, ຜູ້ອະທິບາຍ ແລະ ຄົນທີ່ຖືກເອີ້ນວ່າເປັນບຸກຄົນຍິ່ງໃຫຍ່ຝ່າຍວິນຍານ ຈະໄປໄກຮອດໃສ! ຫາກບໍ່ມີການເລີ່ມຕົ້ນຂອງຂັ້ນຕອນໃໝ່ນີ້ຂອງພາລະກິດ, ສິ່ງທີ່ພວກເຈົ້າເວົ້າເຖິງກໍຈະຫຼ້າສະໄໝແລ້ວ! ມັນອາດຈະກ່ຽວກັບການຂຶ້ນສູ່ບັນລັງ ຫຼື ການຈັດກຽມວຸດທິພາວະເພື່ອກາຍເປັນກະສັດ; ອາດຈະເປັນການປະຕິເສດຕົນເອງ ຫຼື ເອົາຊະນະຕົນເອງ; ອາດຈະເປັນຄວາມອົດທົນ ຫຼື ຮຽນຮູ້ບົດຮຽນຈາກສິ່ງຕ່າງໆ; ອາດຈະເປັນຄວາມຖ່ອມຕົນ ຫຼື ຄວາມຮັກ. ສິ່ງນີ້ບໍ່ແມ່ນການຮ້ອງເພງທຳນອງເດີມອີກຄັ້ງບໍ? ມັນເປັນພຽງໃນກໍລະນີທີ່ເອີ້ນສິ່ງດຽວກັນດ້ວຍຊື່ທີ່ແຕກຕ່າງກັນເທົ່ານັ້ນ! ບໍ່ວ່າຈະເປັນການປົກຄຸມຫົວຂອງຄົນໜຶ່ງ ແລະ ຫັກເຂົ້າຈີ່ ຫຼື ວາງມື ແລະ ອະທິຖານ ແລະ ການຮັກສາຄົນປ່ວຍ ແລະ ການຂັບໄລ່ຜີຮ້າຍ. ສິ່ງນີ້ສາມາດມີພາລະກິດໃໝ່ບໍ? ສາມາດມີໂອກາດສຳລັບການພັດທະນາບໍ? ຖ້າເຈົ້າສືບຕໍ່ນຳພາໃນລັກສະນະນີ້, ເຈົ້າຈະຕິດຕາມຄຳສັ່ງສອນຢ່າງລັບຫູລັບຕາ ຫຼື ປະຕິບັດຕາມທຳນຽມ. ພວກເຈົ້າເຊື່ອວ່າພາລະກິດຂອງພວກເຈົ້ານັ້ນສູງສົ່ງຫຼາຍ, ແຕ່ພວກເຈົ້າບໍ່ຮູ້ບໍວ່າ ມັນຖືກສົ່ງຕໍ່ ແລະ ສັ່ງສອນໂດຍ "ຊາຍເຖົ້າ" ເຫຼົ່ານັ້ນທີ່ຢູ່ໃນຍຸກບູຮານ? ທຸກສິ່ງທີ່ພວກເຈົ້າເວົ້າ ແລະ ບໍ່ໄດ້ເວົ້າ ແມ່ນຄຳເວົ້າສຸດທ້າຍຂອງຊາຍເຖົ້າເຫຼົ່ານັ້ນບໍ? ມັນບໍ່ແມ່ນສິ່ງທີ່ຖືກກ່າວຫາຂອງຊາຍເຖົ້າເຫຼົ່ານີ້ກ່ອນທີ່ພວກເຂົາຈະຕາຍຈາກໄປບໍ? ເຈົ້າຄິດບໍວ່າການກະທຳຂອງພວກເຈົ້າລື່ນການກະທຳຂອງອັກຄະສາວົກ ແລະ ຜູ້ປະກາດພຣະທຳຂອງຮຸ່ນຄົນທີ່ຢູ່ໃນອະດີດ ແລະ ເຖິງກັບລື່ນທຸກສິ່ງບໍ? ການເລີ່ມຕົ້ນຂອງຂັ້ນຕອນນີ້ຂອງພາລະກິດໄດ້ນຳຈຸດຈົບມາສູ່ການເຄົາລົບບູຊາຂອງພວກເຈົ້າຕໍ່ພາລະກິດຂອງພະຍານລີໃນການສະແຫວງຫາເພື່ອກາຍມາເປັນກະສັດ ແລະ ຂຶ້ນສູ່ບັນລັງ ແລະ ມັນໄດ້ຈັບກຸມຄວາມອວດດີ ແລະ ໂອ້ອວດຂອງພວກເຈົ້າ, ເພື່ອວ່າພວກເຈົ້າຈະບໍ່ສາມາດເຂົ້າໄປຫຍຸ້ງກັບຂັ້ນຕອນນີ້ຂອງພາລະກິດ. ຫາກປາສະຈາກຂັ້ນຕອນນີ້ຂອງພາລະກິດ, ພວກເຈົ້າຈະຈົມເລິກລົງຈົນບໍ່ສາມາດໄຖ່ບາບໄດ້. ມີຫຼາຍສິ່ງທີ່ເກົ່າແກ່ຢູ່ທ່າມກາງພວກເຈົ້າຫຼາຍເກີນໄປ! ໂຊກດີ, ພາລະກິດໃນປັດຈຸບັນໄດ້ນຳພວກເຈົ້າກັບຄືນມາ; ບໍ່ດັ່ງນັ້ນ ຜູ້ໃດຈະຮູ້ເຖິງທິດທາງທີ່ພວກເຈົ້າຈະໄປ! ຍ້ອນພຣະເຈົ້າເປັນພຣະເຈົ້າທີ່ໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ, ເປັນຫຍັງເຈົ້າຈຶ່ງບໍ່ສະແຫວງຫາສິ່ງໃໝ່? ເປັນຫຍັງເຈົ້າຈຶ່ງຍັງຍຶດຕິດກັບສິ່ງເດີມໆ? ສະນັ້ນ ການຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດໃນປັດຈຸບັນຈຶ່ງມີຄວາມສຳຄັນທີ່ສຸດ!

# ມີພຽງແຕ່ຄົນທີ່ຖືກເຮັດໃຫ້ສົມບູນແລ້ວເທົ່ານັ້ນ ຈຶ່ງສາມາດດຳລົງຊີວິດທີ່ມີຄວາມໝາຍໄດ້

ໃນຄວາມຈິງ ພາລະກິດທີ່ກຳລັງປະຕິບັດຢູ່ໃນຕອນນີ້ແມ່ນເພື່ອໃຫ້ຜູ້ຄົນປະຖິ້ມຊາຕານ, ບັນພະບຸລຸດເດີມຂອງພວກເຂົາ. ການພິພາກສາທຸກຢ່າງດ້ວຍພຣະທຳແມ່ນແນໃສ່ເພື່ອເປີດໂປງອຸປະນິໄສທີ່ເສື່ອມຊາມຂອງມະນຸດຊາດ ແລະ ເພື່ອເຮັດໃຫ້ຜູ້ຄົນເຂົ້າໃຈແກ່ນແທ້ແຫ່ງຊີວິດ. ການພິພາກສາຊໍ້າໆເຫຼົ່ານີ້ສຽບໄດ້ແທງໃສ່ຫົວໃຈຂອງຜູ້ຄົນ. ການພິພາກສາແຕ່ລະຄັ້ງກ່ຽວພັນກັບຊະຕາກຳຂອງພວກເຂົາໂດຍກົງ ແລະ ມຸ່ງໝາຍທີ່ຈະເຮັດໃຫ້ຫົວໃຈຂອງພວກເຂົາໄດ້ຮັບບາດເຈັບ ເພື່ອວ່າພວກເຂົາຈະສາມາດປະຖິ້ມທຸກສິ່ງ ແລະ ມາຮູ້ຈັກຊີວິດ; ຮູ້ຈັກໂລກທີ່ສົກກະປົກນີ້, ຮູ້ຈັກສະຕິປັນຍາ ແລະ ລິດທານຸພາບສູງສຸດຂອງພຣະເຈົ້າ ແລະ ຍັງຮູ້ຈັກມະນຸດຊາດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ. ຍິ່ງມະນຸດໄດ້ຮັບການຕີສອນ ແລະ ການພິພາກສາແບບນີ້ຫຼາຍສໍ່າໃດ, ຫົວໃຈຂອງມະນຸດກໍ່ຍິ່ງສາມາດຖືກເຮັດໃຫ້ບາດເຈັບໄດ້ຫຼາຍສໍ່ານັ້ນ ແລະ ຈິດວິນຍານຂອງເຂົາກໍ່ຍິ່ງສາມາດຖືກປຸກໃຫ້ຕື່ນຫຼາຍຍິ່ງຂຶ້ນ. ການປຸກຈິດວິນຍານຂອງຄົນເຫຼົ່ານີ້ທີ່ເສື່ອມຊາມທີ່ສຸດ ແລະ ຄົນ ຖືກຫຼອກລວງຢ່າງຮ້າຍແຮງທີ່ສຸດຄືເປົ້າໝາຍຂອງການພິພາກສາປະເພດນີ້. ມະນຸດບໍ່ມີຈິດວິນຍານ ນັ້ນກໍ່ຄື ຈິດວິນຍານຂອງເຂົາໄດ້ຕາຍໄປດົນນານແລ້ວ ແລະ ເຂົາບໍ່ຮູ້ຈັກວ່າມີສະຫວັນ, ບໍ່ຮູ້ຈັກວ່າມີພຣະເຈົ້າ ແລະ ບໍ່ສາມາດຮູ້ໄດ້ວ່າເຂົາກຳລັງດີ້ນຣົນໃນເຫວເລິກແຫ່ງຄວາມຕາຍ; ເຂົາຈະສາມາດຮູ້ຈັກໄດ້ແນວໃດວ່າ ເຂົາກຳລັງດຳລົງຊີວິດໃນນະຮົກນີ້ທີ່ຢູ່ເທິງແຜ່ນດິນໂລກ? ເຂົາຈະສາມາດຮູ້ຈັກໄດ້ແນວໃດວ່າ ຊາກສົບຂອງເຂົາທີ່ເນົ່າເປື່ອຍນີ້ໄດ້ຕົກລົງໄປຢູ່ໃນແດນມໍລະນາແຫ່ງຄວາມຕາຍຜ່ານການທີ່ຊາຕານເຮັດໃຫ້ເສື່ອມຊາມ? ເຂົາຈະສາມາດຮູ້ຈັກໄດ້ແນວໃດວ່າ ທຸກສິ່ງເທິງແຜ່ນດິນໂລກຖືກທຳລາຍເປັນເວລາດົນນານຈົນເກີນກວ່າທີ່ມະນຸດຈະສາມາດແກ້ໄຂໄດ້? ແລ້ວເຂົາຈະສາມາດຮູ້ຈັກໄດ້ແນວໃດວ່າພຣະຜູ້ສ້າງໄດ້ລົງມາເທິງແຜ່ນດິນໂລກໃນມື້ນີ້ ແລະ ກຳລັງຊອກຫາກຸ່ມຄົນເສື່ອມຊາມທີ່ພຣະອົງສາມາດຊ່ວຍໃຫ້ລອດພົ້ນໄດ້? ເຖິງແມ່ນວ່າ ຫຼັງຈາກທີ່ມະນຸດໄດ້ຜະເຊີນກັບການຫຼໍ່ຫຼອມ ແລະ ການພິພາກສາທຸກຢ່າງທີ່ສາມາດເກີດຂຶ້ນໄດ້, ຈິດສຳນຶກທີ່ແຂງກະດ້າງຂອງເຂົາກໍ່ຍັງບໍ່ຕື່ນຂຶ້ນແມ່ນພຽງໜ້ອຍດຽວ ແລະ ບໍ່ມີການຕອບໂຕ້ຫຍັງແມ່ນແຕ່ໜ້ອຍດຽວແທ້ໆ. ມະນຸດຊາດຊ່າງເສື່ອມໂຊມ! ແລ້ວເຖິງແມ່ນວ່າ ການພິພາກສາປະເພດນີ້ເປັນຄືກັບໝາກເຫັບຮ້າຍກາດທີ່ຕົກລົງມາຈາກທ້ອງຟ້າ, ມັນກໍ່ເພື່ອຜົນປະໂຫຍດສຳລັບມະນຸດຫຼາຍທີ່ສຸດ. ຖ້າບໍ່ແມ່ນຍ້ອນການພິພາກສາຄົນແບບນີ້ ມັນກໍ່ຈະບໍ່ມີຜົນຫຍັງຕາມມາ ແລະ ມັນເປັນໄປບໍ່ໄດ້ແທ້ໆທີ່ຈະຊ່ວຍຜູ້ຄົນໃຫ້ລອດພົ້ນຈາກເຫວເລິກແຫ່ງຄວາມທຸກລຳບາກໄດ້. ຖ້າບໍ່ແມ່ນຍ້ອນພາລະກິດນີ້ ມັນກໍ່ຈະເປັນການຍາກຫຼາຍທີ່ຜູ້ຄົນຈະຫຼຸດພົ້ນຈາກແດນມໍລະນາ, ເພາະຫົວໃຈຂອງພວກເຂົາໄດ້ຕາຍໄປດົນແລ້ວ ແລະ ຈິດວິນຍານຂອງພວກເຂົາກໍ່ຖືກຊາຕານຢຽບຢໍ່າແຕ່ດົນແລ້ວ. ການຊ່ວຍພວກເຈົ້າທີ່ຈົມຢູ່ກັບຄວາມເສື່ອມໂຊມຢ່າງໜັກທີ່ສຸດໃຫ້ລອດພົ້ນແມ່ນຈຳເປັນຕ້ອງມີການເອີ້ນເອົາພວກເຈົ້າຢ່າງແຮງ, ພິພາກສາພວກເຈົ້າຢ່າງໜັກ; ແລ້ວໃນ

ເມື່ອນັ້ນເອງ ມັນຈຶ່ງຈະເປັນໄປໄດ້ທີ່ຈະປຸກຫົວໃຈທີ່ເຢືອກເຢັນຂອງພວກເຈົ້າໃຫ້ຕື່ນຂຶ້ນ.

ເນື້ອໜັງຂອງພວກເຈົ້າ, ຄວາມປາຖະໜາເກີນໂຕຂອງພວກເຈົ້າ, ຄວາມໂລບຂອງພວກເຈົ້າ ແລະ ຕັນຫາຂອງພວກເຈົ້າແມ່ນຖືກຝັງເລິກໃນພວກເຈົ້າ. ສະນັ້ນ ສິ່ງເຫຼົ່ານີ້ກຳລັງຄວບຄຸມຫົວໃຈຂອງພວກເຈົ້າຢູ່ຕະຫຼອດເວລາຈົນພວກເຈົ້າບໍ່ມີອຳນາດທີ່ຈະປົດແອກແຫ່ງຄວາມຄິດແບບສັກດີນາ ແລະ ເສື່ອມຊາມເຫຼົ່ານັ້ນໄດ້. ພວກເຈົ້າບໍ່ປາຖະໜາທີ່ຈະປ່ຽນແປງສະຖານະການໃນປັດຈຸບັນຂອງພວກເຈົ້າ ຫຼື ຫຼົບໜີຈາກອິດທິພົນແຫ່ງຄວາມມືດ. ພວກເຈົ້າຖືກຜູກມັດກັບສິ່ງເຫຼົ່ານັ້ນແທ້ໆ. ເຖິງແມ່ນພວກເຈົ້າທຸກຄົນຮູ້ຈັກວ່າຊີວິດແບບນີ້ເຈັບປວດຫຼາຍ ແລະ ໂລກຂອງມະນຸດໃບນີ້ມືດມົວຫຼາຍ, ແຕ່ຍັງບໍ່ມີຄົນໃດໃນບັນດາພວກເຈົ້າທີ່ກ້າປ່ຽນແປງຊີວິດຂອງພວກເຈົ້າ. ພວກເຈົ້າພຽງແຕ່ຕ້ອງການຫຼົບໜີຈາກຄວາມເປັນຈິງຂອງຊີວິດນີ້, ບັນລຸການຢູ່ເໜືອວິນຍານ ແລະ ມີຊີວິດໃນສະພາບແວດລ້ອມທີ່ສະຫງົບສຸກ, ມີຄວາມສຸກ ແລະ ເປັນຄືກັບສະຫວັນ. ພວກເຈົ້າບໍ່ເຕັມໃຈທີ່ຈະອົດທົນກັບຄວາມລຳບາກເພື່ອປ່ຽນແປງຊີວິດໃນປັດຈຸບັນຂອງພວກເຈົ້າ; ພວກເຈົ້າບໍ່ເຕັມໃຈທີ່ຈະຄົ້ນຫາຊີວິດທີ່ພວກເຈົ້າຄວນເຂົ້າໃນການພິພາກສາ ແລະ ການຕີສອນນີ້. ກົງກັນຂ້າມ ພວກເຈົ້າຝັນເຖິງສິ່ງທີ່ບໍ່ເປັນຈິງທັງໝົດກ່ຽວກັບໂລກອັນສວຍງາມທີ່ຢູ່ເໜືອເນື້ອໜັງ. ຊີວິດທີ່ພວກເຈົ້າປາຖະໜາແມ່ນຊີວິດທີ່ພວກເຈົ້າສາມາດໄດ້ຮັບໂດຍບໍ່ຕ້ອງໃຊ້ຄວາມພະຍາຍາມ ເຊິ່ງປາສະຈາກການທົນທຸກກັບຄວາມເຈັບປວດໃດໆ. ນັ້ນບໍ່ແມ່ນຄວາມຈິງຢ່າງສິ້ນເຊີງ! ເພາະສິ່ງທີ່ພວກເຈົ້າຄາດຫວັງນັ້ນບໍ່ແມ່ນການດຳລົງຊີວິດທີ່ມີຄວາມໝາຍໃນເນື້ອໜັງ ແລະ ການຮັບຄວາມຈິງໃນຊ່ວງເວລາຊີວິດ ນັ້ນກໍ່ຄື ການດຳລົງຊີວິດເພື່ອຄວາມຈິງ ແລະ ການລຸກຢືນຂຶ້ນເພື່ອຄວາມຍຸຕິທຳ. ນີ້ບໍ່ແມ່ນຊີວິດທີ່ພວກເຈົ້າຈະພິຈາລະນາເປັນສິ່ງທີ່ສົດໃສ ແລະ ແວວວາວ. ພວກເຈົ້າຮູ້ສຶກວ່າ ນີ້ບໍ່ແມ່ນຊີວິດທີ່ສວຍງາມ ຫຼື ມີຄວາມໝາຍ. ໃນສາຍຕາຂອງພວກເຈົ້າແລ້ວ ການດຳລົງຊີວິດແບບນັ້ນຈະຮູ້ສຶກຄືກັບວ່າບໍ່ຍຸຕິທຳ! ເຖິງແມ່ນວ່າພວກເຈົ້າຍອມຮັບເອົາການຕີສອນນີ້ໃນມື້ນີ້, ເຖິງແມ່ນວ່າສິ່ງທີ່ພວກເຈົ້າກຳລັງສະແຫວງຫາບໍ່ແມ່ນເພື່ອຮັບຄວາມຈິງ ຫຼື ເພື່ອດຳລົງຊີວິດຕາມຄວາມຈິງໃນປັດຈຸບັນ ແຕ່ກົງກັນຂ້າມແມ່ນເພື່ອທີ່ຈະສາມາດເຂົ້າຊີວິດທີ່ມີຄວາມສຸກນອກເໜືອຈາກເນື້ອໜັງໃນພາຍຫຼັງ. ພວກເຈົ້າບໍ່ໄດ້ສະແຫວງຫາຄວາມຈິງ ຫຼື ພວກເຈົ້າບໍ່ລຸກຢືນຂຶ້ນເພື່ອຄວາມຈິງ ແລະ ພວກເຈົ້າບໍ່ໄດ້ມີຊີວິດຢູ່ເພື່ອຄວາມຈິງຢ່າງແນ່ນອນ. ພວກເຈົ້າບໍ່ສະແຫວງຫາທາງເຂົ້າໃນມື້ນີ້ ແຕ່ກົງກັນຂ້າມ ຄວາມຄິດຂອງພວກເຈົ້າຖືກຄອບງຳດ້ວຍອະນາຄົດ ແລະ ດ້ວຍສິ່ງທີ່ອາດກາຍມາເປັນຈິງໃນມື້ໜຶ່ງ: ພວກເຈົ້າຈ້ອງເບິ່ງທ້ອງຟ້າສີຄາມ, ຮ້ອງໄຫ້ຢ່າງຂົມຂື່ນ ແລະ ຄາດຫວັງທີ່ຈະຖືກຮັບຂຶ້ນສູ່ສະຫວັນໃນມື້ໜຶ່ງ. ພວກເຈົ້າບໍ່ຮູ້ຈັກບໍວ່າ ລັກສະນະການຄິດແບບນັ້ນຂອງພວກເຈົ້າແມ່ນອອກຈາກຄວາມເປັນຈິງແລ້ວ? ພວກເຈົ້າຍັງສືບຕໍ່ຄິດວ່າ ພຣະຜູ້ໄຖ່ແຫ່ງຄວາມກະລຸນາ ແລະ ຄວາມເມດຕາທີ່ບໍ່ມີມື້ສິ້ນສຸດຈະມາໃນມື້ໜຶ່ງໂດຍບໍ່ຕ້ອງສົງໄສ ເພື່ອຮັບເອົາເຈົ້າໄປກັບພຣະອົງ, ເຊິ່ງຮັບເອົາພວກເຈົ້າຜູ້ທີ່ໄດ້ອົດທົນຕໍ່ຄວາມລຳບາກ ແລະ ການທົນທຸກໃນໂລກໃບນີ້ ແລະ ພຣະອົງຈະແກ້ໄຂຂໍ້ຂ້ອງໃຈ ແລະ ແກ້ແຄ້ນໃຫ້ກັບເຈົ້າຜູ້ເຊິ່ງຕົກເປັນເຫຍື່ອ ແລະ ຖືກກົດຂີ່. ເຈົ້າບໍ່ໄດ້ເຕັມໄປດ້ວຍຄວາມບາບບໍ? ເຈົ້າເປັນພຽງຄົນດຽວທີ່ໄດ້ທົນທຸກໃນ

ໂລກໃບນີ້ບໍ? ເຈົ້າໄດ້ຕົກຢູ່ໃນອຳນາດຂອງຊາຕານດ້ວຍຕົວເຈົ້າເອງ ແລະ ໄດ້ທົນທຸກລຳບາກ, ພຣະເຈົ້າຍັງຈຳເປັນຕ້ອງແກ້ໄຂຂໍ້ຂ້ອງໃຈຂອງເຈົ້າບໍ? ຄົນທີ່ບໍ່ສາມາດເຮັດຕາມການຮຽກຮ້ອງຂອງພຣະເຈົ້າ, ພວກເຂົາທຸກຄົນບໍ່ແມ່ນສັດຕູຂອງພຣະເຈົ້າບໍ? ຄົນທີ່ບໍ່ເຊື່ອໃນພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດ, ພວກເຂົາບໍ່ແມ່ນຄົນທີ່ຕໍ່ຕ້ານພຣະຄຣິດບໍ? ແລ້ວການກະທຳດີຂອງເຈົ້າຈະມີຄ່າຫຍັງ? ພວກມັນສາມາດເຂົ້າແທນຫົວໃຈທີ່ນະມັດສະການພຣະເຈົ້າບໍ? ເຈົ້າບໍ່ສາມາດຮັບການອວຍພອນຈາກພຣະເຈົ້າໂດຍການເຮັດດີພຽງບາງຢ່າງເທົ່ານັ້ນ ແລະ ພຣະເຈົ້າຈະບໍ່ແກ້ໄຂຂໍ້ຂ້ອງໃຈຂອງເຈົ້າ ແລະ ແກ້ແຄ້ນສິ່ງຊົ່ວຮ້າຍທີ່ເກີດຂຶ້ນກັບເຈົ້າ ພຽງແຕ່ຍ້ອນເຈົ້າຕົກເປັນເຫຍື່ອ ແລະ ຖືກກົດຂີ່. ຄົນທີ່ເຊື່ອພຣະເຈົ້າແຕ່ບໍ່ຮູ້ຈັກພຣະເຈົ້າ ແຕ່ເປັນຜູ້ທີ່ເຮັດດີ, ພວກເຂົາທຸກຄົນຍັງບໍ່ໄດ້ຖືກຕີສອນບໍ? ເຈົ້າພຽງແຕ່ເຊື່ອໃນພຣະເຈົ້າ, ພຽງແຕ່ຕ້ອງການໃຫ້ພຣະເຈົ້າແກ້ໄຂ ແລະ ແກ້ແຄ້ນສິ່ງຊົ່ວຮ້າຍທີ່ເກີດຂຶ້ນກັບເຈົ້າ ແລະ ເຈົ້າຕ້ອງການໃຫ້ພຣະເຈົ້າມອບມື້ຂອງເຈົ້າໃຫ້ແກ່ເຈົ້າ, ເຊິ່ງເປັນມື້ທີ່ເຈົ້າສາມາດເຊີດຊູຄໍຂອງເຈົ້າໄດ້ໃນທີ່ສຸດ. ແຕ່ເຈົ້າປະຕິເສດທີ່ຈະສົນໃຈຄວາມຈິງ ຫຼື ເຈົ້າບໍ່ກະຫາຍທີ່ຈະດຳລົງຊີວິດຕາມຄວາມຈິງ. ແຮງໄກທີ່ເຈົ້າຈະສາມາດຫຼຸດພົ້ນຈາກຊີວິດທີ່ລຳບາກ ແລະ ວ່າງເປົ່ານີ້ໄດ້. ກົງກັນຂ້າມ ໃນຂະນະທີ່ກຳລັງດຳລົງຊີວິດຂອງເຈົ້າໃນເນື້ອໜັງ ແລະ ຊີວິດທີ່ຜິດບາບຂອງເຈົ້າ, ເຈົ້າຫຼຽວເບິ່ງຫາພຣະເຈົ້າດ້ວຍຄວາມຄາດຫວັງເພື່ອໃຫ້ແກ້ໄຂຄວາມທຸກໃຈຂອງເຈົ້າ ແລະ ແຍກໝອກແຫ່ງການມີຊີວິດຢູ່ຂອງເຈົ້າ. ແຕ່ສິ່ງນີ້ເປັນໄປໄດ້ບໍ? ຖ້າເຈົ້າມີຄວາມຈິງ, ເຈົ້າສາມາດຕິດຕາມພຣະເຈົ້າໄດ້. ຖ້າເຈົ້າດຳລົງຊີວິດຕາມນັ້ນ, ເຈົ້າກໍ່ສາມາດເປັນການສຳແດງອອກເຖິງພຣະທຳຂອງພຣະເຈົ້າ. ຖ້າເຈົ້າມີຊີວິດ, ເຈົ້າກໍ່ສາມາດມີຄວາມສຸກກັບພອນຂອງພຣະເຈົ້າໄດ້. ຄົນທີ່ມີຄວາມຈິງກໍ່ສາມາດມີຄວາມສຸກກັບພອນຂອງພຣະເຈົ້າ. ພຣະເຈົ້າຮັບປະກັນວ່າຈະແກ້ໄຂສຳລັບຄົນທີ່ຮັກພຣະອົງໝົດຫົວໃຈ ແລະ ຄົນທີ່ອົດທົນຕໍ່ຄວາມລຳບາກ ແລະ ການທົນທຸກ, ແຕ່ບໍ່ແມ່ນສຳລັບຄົນທີ່ພຽງແຕ່ຮັກຕົວເອງ ແລະ ໄດ້ຕົກເປັນເຫຍື່ອໃຫ້ກັບການຫຼອກລວງຂອງຊາຕານ. ມັນຈະສາມາດມີຄວາມດີໃນຄົນທີ່ບໍ່ຮັກຄວາມຈິງໄດ້ແນວໃດ? ມັນຈະສາມາດມີຄວາມຊອບທຳໃນຄົນທີ່ພຽງແຕ່ຮັກເນື້ອໜັງໄດ້ແນວໃດ? ຄວາມຊອບທຳ ແລະ ຄວາມດີບໍ່ແມ່ນຖືກເວົ້າເຖິງພຽງແຕ່ອ້າງເຖິງຄວາມຈິງບໍ? ພວກເຂົາບໍ່ໄດ້ຖືກສະຫງວນໄວ້ສຳລັບຄົນທີ່ຮັກພຣະເຈົ້າໝົດໃຈບໍ? ຄົນທີ່ບໍ່ຮັກຄວາມຈິງ ແລະ ຄົນທີ່ເປັນພຽງຊາກສົບທີ່ເນົ່າເປື່ອຍ, ທຸກຄົນເຫຼົ່ານີ້ບໍ່ໄດ້ເຊື່ອງຄວາມຊົ່ວຮ້າຍໄວ້ບໍ? ຄົນທີ່ບໍ່ສາມາດດຳລົງຊີວິດຕາມຄວາມຈິງ, ພວກເຂົາທຸກຄົນບໍ່ແມ່ນສັດຕູຂອງຄວາມຈິງບໍ? ແລ້ວພວກເຈົ້າເດ?

ຖ້າເຈົ້າສາມາດຫຼຸດພົ້ນອອກຈາກອິດທິພົນຂອງຄວາມມືດເຫຼົ່ານີ້ ແລະ ແຍກຕົນເອງອອກຈາກສິ່ງທີ່ບໍ່ສະອາດເຫຼົ່ານັ້ນ, ຖ້າພວກເຈົ້າກາຍມາເປັນຄົນທີ່ບໍລິສຸດ, ແລ້ວພວກເຈົ້າກໍ່ຈະມີຄວາມຈິງ. ມັນບໍ່ແມ່ນວ່າທຳມະຊາດຂອງເຈົ້າໄດ້ປ່ຽນແປງໄປ, ແຕ່ພຽງແຕ່ວ່າເຈົ້າສາມາດນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ສາມາດປະຖິ້ມເນື້ອໜັງໄດ້. ນີ້ຄືຄຸນສົມບັດຂອງຄົນທີ່ໄດ້ຮັບການຊຳລະລ້າງແລ້ວ. ເປົ້າໝາຍຫຼັກຂອງພາລະກິດແຫ່ງການເອົາຊະນະແມ່ນເພື່ອຊຳລະລ້າງມະນຸດຊາດ ເພື່ອວ່າມະນຸດຈະສາມາດມີຄວາມຈິງ, ເພາະມະນຸດເຂົ້າໃຈຄວາມຈິງໜ້ອຍເກີນໄປ! ການປະຕິບັດພາລະກິດແຫ່ງ

ການເອົາຊະນະໃນຜູ້ຄົນເຫຼົ່ານັ້ນແມ່ນມີຄວາມໝາຍທີ່ສຸດ. ພວກເຈົ້າໄດ້ຕົກຢູ່ພາຍໃຕ້ອິດທິພົນແຫ່ງຄວາມມືດ ແລະ ຖືກທໍາຮ້າຍຢ່າງຮຸນແຮງ. ສະນັ້ນ ເປົ້າໝາຍຂອງພາລະກິດນີ້ແມ່ນເພື່ອເຮັດໃຫ້ພວກເຈົ້າສາມາດຮູ້ຈັກທໍາມະຊາດຂອງມະນຸດ ແລະ ດໍາລົງຊີວິດຕາມຄວາມຈິງ. ການຖືກເຮັດໃຫ້ສົມບູນຄືສິ່ງທີ່ສິ່ງຖືກສ້າງທັງໝົດຄວນຮັບເອົາ. ຖ້າພາລະກິດໃນຂັ້ນຕອນນີ້ພຽງແຕ່ກ່ຽວພັນກັບການເຮັດໃຫ້ຜູ້ຄົນສົມບູນ, ແລ້ວມັນກໍ່ສາມາດຖືກປະຕິບັດໃນປະເທດອັງກິດ ຫຼື ອາເມຣິກາ ຫຼື ອິດສະຣາເອນ; ມັນສາມາດຖືກປະຕິບັດໃນຄົນທີ່ຢູ່ໃນຊາດໃດໜຶ່ງ. ແຕ່ພາລະກິດແຫ່ງການເອົາຊະນະແມ່ນຖືກເລືອກໄວ້ແລ້ວ. ບາດກ້າວທໍາອິດຂອງພາລະກິດແຫ່ງການເອົາຊະນະເປັນໄລຍະສັ້ນ; ຍິ່ງໄປກວ່ານັ້ນ, ມັນຈະຖືກໃຊ້ເພື່ອເຮັດໃຫ້ຊາຕານອັບອາຍ ແລະ ເອົາຊະນະຈັກກະວານທັງປວງ. ນີ້ຄືພາລະກິດເລີ່ມຕົ້ນຂອງການເອົາຊະນະ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ສິ່ງຖືກສ້າງໃດໜຶ່ງທີ່ເຊື່ອໃນພຣະເຈົ້າສາມາດຖືກເຮັດໃຫ້ສົມບູນແບບໄດ້ ເພາະການຖືກເຮັດໃຫ້ສົມບູນແມ່ນສິ່ງທີ່ສາມາດບັນລຸໄດ້ຫຼັງຈາກການປ່ຽນແປງໄລຍະຍາວເທົ່ານັ້ນ. ແຕ່ການຖືກເອົາຊະນະເປັນສິ່ງທີ່ແຕກຕ່າງກັນ. ຕົວຢ່າງ ແລະ ແບບຢ່າງສໍາລັບການເອົາຊະນະຕ້ອງເປັນຄົນທີ່ຫຼ້າຫຼັງທີ່ສຸດ, ດໍາລົງຊີວິດຢູ່ໃນຄວາມມືດມົວທີ່ສຸດ; ພວກເຂົາຕ້ອງເປັນຄົນທີ່ເສື່ອມໂຊມທີ່ສຸດ, ບໍ່ເຕັມໃຈຢ່າງທີ່ສຸດທີ່ຈະຮັບຮູ້ພຣະເຈົ້າ ແລະ ບໍ່ເຊື່ອຟັງພຣະເຈົ້າຫຼາຍທີ່ສຸດ. ນີ້ຄືປະເພດຂອງຄົນທີ່ສາມາດເປັນພະຍານເຖິງການຖືກເອົາຊະນະແທ້ໆ. ເປົ້າໝາຍຫຼັກຂອງພາລະກິດແຫ່ງການເອົາຊະນະແມ່ນເພື່ອເຮັດໃຫ້ຊາຕານພ່າຍແພ້, ໃນຂະນະທີ່ເປົ້າໝາຍຫຼັກຂອງການເຮັດໃຫ້ຜູ້ຄົນສົມບູນແມ່ນເພື່ອຮັບຜູ້ຄົນ. ມັນແມ່ນເພື່ອເຮັດໃຫ້ຜູ້ຄົນສາມາດມີຄໍາພະຍານຫຼັງຈາກທີ່ໄດ້ຖືກເອົາຊະນະ, ພາລະກິດແຫ່ງການເອົາຊະນະນີ້ຈຶ່ງຖືກປະຕິບັດໃນທີ່ນີ້, ໃນຄົນແບບພວກເຈົ້າ. ຈຸດປະສົງແມ່ນເພື່ອໃຫ້ຜູ້ຄົນເປັນພະຍານຫຼັງຈາກທີ່ຖືກເອົາຊະນະ. ຄົນເຫຼົ່ານີ້ທີ່ຖືກເອົາຊະນະຈະຖືກໃຊ້ເພື່ອບັນລຸເປົ້າໝາຍຂອງການເຮັດໃຫ້ຊາຕານອັບອາຍ. ສະນັ້ນ ແມ່ນຫຍັງຄືວິທີຫຼັກຂອງການເອົາຊະນະ? ການຕີສອນ, ການພິພາກສາ, ການສາບແຊ່ງ ແລະ ການເປີດໂປງ, ນັ້ນກໍ່ຄືການນໍາໃຊ້ອຸປະນິໄສທີ່ຊອບທໍາເພື່ອເອົາຊະນະຜູ້ຄົນ ເພື່ອວ່າພວກເຂົາຈະເຊື່ອໝັ້ນຢ່າງສິ້ນເຊີງຍ້ອນອຸປະນິໄສທີ່ຊອບທໍາຂອງພຣະເຈົ້າ. ການໃຊ້ຄວາມເປັນຈິງ ແລະ ສິດອໍານາດແຫ່ງພຣະທໍາເພື່ອເອົາຊະນະຜູ້ຄົນ ແລະ ເຮັດໃຫ້ພວກເຂົາເຊື່ອໝັ້ນຢ່າງສົມບູນ, ນີ້ຄືຄວາມໝາຍຂອງການຖືກເອົາຊະນະ. ຄົນທີ່ຖືກເຮັດໃຫ້ສົມບູນບໍ່ພຽງແຕ່ສາມາດບັນລຸຄວາມເຊື່ອຟັງຫຼັງຈາກທີ່ຖືກເອົາຊະນະເທົ່ານັ້ນ, ແຕ່ພວກເຂົາຍັງສາມາດມີຄວາມຮູ້ກ່ຽວກັບພາລະກິດແຫ່ງການພິພາກສາ, ປ່ຽນແປງອຸປະນິໄສຂອງພວກເຂົາ ແລະ ມາຮູ້ຈັກກັບພຣະເຈົ້າ. ພວກເຂົາມີປະສົບການກັບເສັ້ນທາງແຫ່ງການຮັກພຣະເຈົ້າ ແລະ ເຕັມໄປດ້ວຍຄວາມຈິງ. ພວກເຂົາຮຽນຮູ້ວິທີການຜະເຊີນກັບພາລະກິດຂອງພຣະເຈົ້າ, ສາມາດອົດທົນເພື່ອພຣະເຈົ້າ ແລະ ມີຄວາມປະສົງຂອງພວກເຂົາເອງ. ຄົນທີ່ຖືກເຮັດໃຫ້ສົມບູນແມ່ນຄົນທີ່ມີຄວາມເຂົ້າໃຈຢ່າງແທ້ຈິງກ່ຽວກັບຄວາມຈິງ ເນື່ອງຈາກໄດ້ມີປະສົບການກັບພຣະທໍາຂອງພຣະເຈົ້າ. ຄົນທີ່ຖືກເອົາຊະນະແມ່ນຄົນທີ່ຮູ້ຈັກຄວາມຈິງ ແຕ່ບໍ່ໄດ້ຍອມຮັບຄວາມໝາຍທີ່ເປັນຈິງຂອງຄວາມຈິງ. ຫຼັງຈາກທີ່ຖືກເອົາຊະນະ, ພວກເຂົາກໍ່ເຊື່ອຟັງ ແຕ່ຄວາມເຊື່ອຟັງຂອງພວກເຂົາລ້ວນແລ້ວແຕ່ເປັນຜົນມາຈາກ

ການພິພາກສາທີ່ພວກເຂົາໄດ້ຮັບ. ພວກເຂົາບໍ່ມີຄວາມເຂົ້າໃຈຢ່າງສິ້ນເຊີງກ່ຽວກັບຄວາມໝາຍທີ່ແທ້ຈິງຂອງຄວາມຈິງຫຼາຍຢ່າງ. ພວກເຂົາຮັບຮູ້ຄວາມຈິງທາງວາຈາ, ແຕ່ພວກເຂົາບໍ່ໄດ້ເຂົ້າສູ່ຄວາມຈິງ; ພວກເຂົາຢັ່ງເຖິງຄວາມຈິງ, ແຕ່ພວກເຂົາບໍ່ໄດ້ມີປະສົບການກັບຄວາມຈິງ. ພາລະກິດທີ່ກຳລັງປະຕິບັດໃນຜູ້ຄົນທີ່ກຳລັງຖືກເຮັດໃຫ້ສົມບູນປະກອບດ້ວຍການຕີສອນ ແລະ ການພິພາກສາ, ພ້ອມດ້ວຍການຈັດແຈງຊີວິດ. ຄົນທີ່ເຊີດຊູການເຂົ້າສູ່ຄວາມຈິງກໍ່ເປັນຄົນທີ່ຈະຖືກເຮັດໃຫ້ສົມບູນ. ຄວາມແຕກຕ່າງລະຫວ່າງຄົນທີ່ຖືກເຮັດໃຫ້ສົມບູນ ແລະ ຄົນທີ່ຖືກເອົາຊະນະແມ່ນຂຶ້ນຢູ່ກັບວ່າພວກເຂົາເຂົ້າສູ່ຄວາມຈິງຫຼື ບໍ່. ຄົນທີ່ຖືກເຮັດໃຫ້ສົມບູນແມ່ນຄົນທີ່ຢັ່ງເຖິງຄວາມຈິງ, ໄດ້ເຂົ້າສູ່ຄວາມຈິງ ແລະ ກຳລັງດຳລົງຊີວິດຕາມຄວາມຈິງ; ຄົນທີ່ບໍ່ສາມາດຖືກເຮັດໃຫ້ສົມບູນແມ່ນຄົນທີ່ບໍ່ໄດ້ຢັ່ງເຖິງຄວາມຈິງ ແລະ ບໍ່ໄດ້ເຂົ້າສູ່ຄວາມຈິງ ນັ້ນກໍ່ຄື ຄົນທີ່ບໍ່ໄດ້ດຳລົງຊີວິດຕາມຄວາມຈິງ. ຖ້າຜູ້ຄົນດັ່ງກ່າວສາມາດເຊື່ອຟັງຢ່າງສິ້ນເຊີງໃນຕອນນີ້, ແລ້ວພວກເຂົາກໍ່ສາມາດຖືກເອົາຊະນະໄດ້. ຖ້າຄົນທີ່ຖືກເອົາຊະນະບໍ່ສະແຫວງຫາຄວາມຈິງ, ຖ້າພວກເຂົາປະຕິບັດຕາມ ແຕ່ບໍ່ໄດ້ດຳລົງຊີວິດຕາມຄວາມຈິງ, ຖ້າພວກເຂົາໄດ້ເຫັນ ແລະ ໄດ້ຍິນຄວາມຈິງ ແຕ່ບໍ່ເຊີດຊູການດຳລົງຊີວິດຕາມຄວາມຈິງ, ແລ້ວພວກເຂົາກໍ່ບໍ່ສາມາດຖືກເຮັດໃຫ້ສົມບູນ. ຄົນທີ່ຖືກເຮັດໃຫ້ສົມບູນຈະປະຕິບັດຄວາມຈິງຕາມການຮຽກຮ້ອງຂອງພຣະເຈົ້າໃນເສັ້ນທາງແຫ່ງຄວາມສົມບູນ. ຜ່ານສິ່ງນີ້, ພວກເຂົາປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ພວກເຂົາຖືກເຮັດໃຫ້ສົມບູນ. ຄົນໃດກໍ່ຕາມທີ່ຕິດຕາມຈົນເຖິງທີ່ສຸດກ່ອນທີ່ພາລະກິດແຫ່ງການເອົາຊະນະຈະສິ້ນສຸດລົງ ກໍ່ເປັນຄົນທີ່ຖືກເອົາຊະນະ, ແຕ່ບໍ່ສາມາດເວົ້າໄດ້ວ່າເປັນຄົນທີ່ຖືກເຮັດໃຫ້ສົມບູນ. "ຄົນທີ່ຖືກເຮັດໃຫ້ສົມບູນ" ໝາຍເຖິງຄົນທີ່ສາມາດສະແຫວງຫາຄວາມຈິງ ແລະ ຖືກຮັບໂດຍພຣະເຈົ້າຫຼັງຈາກທີ່ພາລະກິດແຫ່ງການເອົາຊະນະໄດ້ສິ້ນສຸດລົງ. ມັນໝາຍເຖິງຄົນທີ່ຍຶດໝັ້ນໃນຄວາມທຸກລຳບາກ ແລະ ດຳລົງຊີວິດຕາມຄວາມຈິງ ຫຼັງຈາກທີ່ພາລະກິດແຫ່ງການເອົາຊະນະໄດ້ສິ້ນສຸດລົງ. ສິ່ງທີ່ແຍກແຍະການຖືກເອົາຊະນະອອກຈາກການຖືກເຮັດໃຫ້ສົມບູນແມ່ນຄວາມແຕກຕ່າງໃນບາດກ້າວຂອງພາລະກິດ ແລະ ຄວາມແຕກຕ່າງໃນລະດັບທີ່ຜູ້ຄົນເຂົ້າໃຈ ແລະ ເຂົ້າສູ່ຄວາມຈິງ. ທຸກຄົນທີ່ບໍ່ກ້າວເຂົ້າໃນເສັ້ນທາງສູ່ຄວາມສົມບູນ ເຊິ່ງໝາຍເຖິງຄົນທີ່ບໍ່ມີຄວາມຈິງ ແມ່ນຈະຖືກກຳຈັດໃນທີ່ສຸດ. ມີພຽງແຕ່ຄົນທີ່ມີຄວາມຈິງ ແລະ ຄົນທີ່ດຳລົງຊີວິດຕາມຄວາມຈິງເທົ່ານັ້ນຈຶ່ງສາມາດຖືກພຣະເຈົ້າຮັບຢ່າງສົມບູນ. ນັ້ນກໍ່ຄື ຄົນທີ່ດຳລົງຊີວິດຕາມພາບລັກຂອງເປໂຕແມ່ນຄົນທີ່ຖືກເຮັດໃຫ້ສົມບູນ, ໃນຂະນະທີ່ຄົນອື່ນໆແມ່ນຄົນທີ່ຖືກເອົາຊະນະ. ພາລະກິດທີ່ກຳລັງປະຕິບັດໃນທຸກຄົນທີ່ກຳລັງຖືກເອົາຊະນະແມ່ນປະກອບດ້ວຍການສາບແຊ່ງ, ການຕີສອນ ແລະ ການສະແດງຄວາມໂກດຮ້າຍເທົ່ານັ້ນ ແລະ ສິ່ງທີ່ຈະເກີດຂຶ້ນກັບພວກເຂົາແມ່ນຄວາມຊອບທຳ ແລະ ຄຳສາບແຊ່ງ. ການປະຕິບັດພາລະກິດໃນຄົນດັ່ງກ່າວຄືການເປີດເຜີຍໂດຍບໍ່ມີພິທີ ຫຼື ຄວາມສຸພາບ ນັ້ນກໍ່ຄື ການເປີດເຜີຍອຸປະນິໄສເສື່ອມຊາມທີ່ຢູ່ພາຍໃນພວກເຂົາ ເພື່ອວ່າພວກເຂົາຈະຮັບຮູ້ມັນດ້ວຍພວກເຂົາເອງ ແລະ ເຊື່ອໝັ້ນຢ່າງສົມບູນ. ຫຼັງຈາກທີ່ມະນຸດເຊື່ອຟັງຢ່າງສົມບູນ, ພາລະກິດແຫ່ງການເອົາຊະນະກໍ່ຈະສິ້ນສຸດລົງ. ເຖິງແມ່ນວ່າຄົນສ່ວນໃຫຍ່ຍັງບໍ່ສະແຫວງຫາເພື່ອເຂົ້າໃຈຄວາມຈິງ, ພາລະກິດແຫ່ງການເອົາຊະນະກໍ່ຈະສິ້ນສຸດລົງ.

ຖ້າເຈົ້າຕ້ອງຖືກເຮັດໃຫ້ສົມບູນ, ມີເງື່ອນໄຂທີ່ຕ້ອງບັນລຸ. ຜ່ານຄວາມຕັ້ງໃຈຂອງເຈົ້າ, ການພາກພຽນຂອງເຈົ້າ ແລະ ຄວາມສຳນຶກຂອງເຈົ້າ ແລະ ຜ່ານການສະແຫວງຫາຂອງເຈົ້າ, ເຈົ້າຈະສາມາດມີປະສົບການກັບຊີວິດ ແລະ ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ນີ້ຄືທາງເຂົ້າຂອງເຈົ້າ ແລະ ທຸກສິ່ງເຫຼົ່ານີ້ແມ່ນສິ່ງຈຳເປັນໃນເສັ້ນທາງສູ່ຄວາມສົມບູນ. ພາລະກິດແຫ່ງການເຮັດໃຫ້ສົມບູນແມ່ນສາມາດປະຕິບັດໃນທຸກຄົນ. ຄົນໃດກໍ່ຕາມທີ່ສະແຫວງຫາພຣະເຈົ້າແມ່ນສາມາດຖືກເຮັດໃຫ້ສົມບູນ ແລະ ມີໂອກາດ ແລະ ຄຸນສົມບັດທີ່ຈະຖືກເຮັດໃຫ້ສົມບູນ. ບໍ່ມີກົດລະບຽບຕາຍຕົວໃນທີ່ນີ້. ບໍ່ວ່າຄົນໆໜຶ່ງຈະສາມາດຖືກເຮັດໃຫ້ສົມບູນໄດ້ ຫຼື ບໍ່ ແມ່ນຂຶ້ນກັບສິ່ງທີ່ຄົນໆນັ້ນສະແຫວງເປັນຫຼັກ. ຄົນທີ່ຮັກຄວາມຈິງ ແລະ ສາມາດດຳລົງຊີວິດຕາມຄວາມຈິງແມ່ນສາມາດຖືກເຮັດໃຫ້ສົມບູນຢ່າງແນ່ນອນ. ຄົນທີ່ບໍ່ຮັກຄວາມຈິງແມ່ນບໍ່ໄດ້ຮັບການຍົກຍ້ອງຈາກພຣະເຈົ້າ; ພວກເຂົາບໍ່ມີຊີວິດທີ່ພຣະເຈົ້າຕ້ອງການ ແລະ ພວກເຂົາບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ພາລະກິດແຫ່ງການເຮັດໃຫ້ສົມບູນແມ່ນພຽງແຕ່ເພື່ອເຫັນແກ່ການຮັບເອົາຜູ້ຄົນ ແລະ ບໍ່ແມ່ນສ່ວນໜຶ່ງໃນພາລະກິດຂອງການສູ້ຮົບກັບຊາຕານ; ພາລະກິດແຫ່ງການເອົາຊະນະແມ່ນພຽງແຕ່ເພື່ອເຫັນແກ່ການສູ້ຮົບກັບຊາຕານ ເຊິ່ງໝາຍຄວາມວ່າຈະໃຊ້ການເອົາຊະນະມະນຸດເພື່ອເຮັດໃຫ້ຊາຕານຜ່າຍແພ້. ພາລະກິດແຫ່ງການເອົາຊະນະແມ່ນພາລະກິດຫຼັກ, ພາລະກິດໃໝ່ທີ່ສຸດ, ພາລະກິດທີ່ບໍ່ເຄີຍປະຕິບັດໃນຍຸກໃດມາກ່ອນ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ເປົ້າໝາຍຂອງຂັ້ນຕອນນີ້ຂອງພາລະກິດແມ່ນເພື່ອເອົາຊະນະທຸກຄົນເປັນຫຼັກ ແລ້ວເຮັດໃຫ້ຊາຕານຜ່າຍແພ້. ພາລະກິດໃນການເຮັດໃຫ້ຜູ້ຄົນສົມບູນ, ນີ້ບໍ່ແມ່ນພາລະກິດໃໝ່. ແກ່ນແທ້ຂອງເປົ້າໝາຍໃນທຸກພາລະກິດໃນລະຫວ່າງພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງຄືການເອົາຊະນະຜູ້ຄົນ. ນີ້ແມ່ນຄືກັບຍຸກແຫ່ງພຣະຄຸນ ເມື່ອພາລະກິດຫຼັກແມ່ນການໄຖ່ບາບມະນຸດຊາດທັງປວງຜ່ານການຖືກຄຶງເທິງໄມ້ກາງແຂນ. "ການຮັບຜູ້ຄົນ" ເປັນສິ່ງທີ່ເພີ່ມເຕີມຈາກພາລະກິດໃນເນື້ອໜັງ ແລະ ຖືກປະຕິບັດພຽງແຕ່ຫຼັງຈາກທີ່ຖືກຄຶງເທິງໄມ້ກາງແຂນ. ເມື່ອພຣະເຢຊູມາ ແລະ ປະຕິບັດພາລະກິດຂອງພຣະອົງ, ເປົ້າໝາຍຂອງພຣະອົງແມ່ນເພື່ອໃຊ້ການຖືກຄຶງເທິງໄມ້ກາງແຂນຂອງພຣະອົງເພື່ອເອົາຊະນະພັນທະນາການແຫ່ງແຫ່ງຄວາມຕາຍ ແລະ ແດນມໍລະນາເປັນຫຼັກ, ເພື່ອເອົາຊະນະອິດທິພົນຂອງຊາຕານ ນັ້ນກໍ່ຄື ເພື່ອເຮັດໃຫ້ຊາຕານຜ່າຍແພ້. ພຽງແຕ່ຫຼັງຈາກທີ່ພຣະເຢຊູຖືກຄຶງເທິງໄມ້ກາງແຂນ, ເປໂຕຈຶ່ງເລີ່ມກ້າວເດີນເທື່ອລະບາດກ້າວໃນເສັ້ນທາງສູ່ຄວາມສົມບູນ. ແນ່ນອນ ເປໂຕແມ່ນໜຶ່ງໃນບັນດາຜູ້ຕິດຕາມພຣະເຢຊູ ໃນຂະນະທີ່ພຣະເຢຊູກຳລັງປະຕິບັດພາລະກິດ ແຕ່ລາວບໍ່ໄດ້ຖືກເຮັດໃຫ້ສົມບູນໃນລະຫວ່າງເວລານັ້ນ. ກົງກັນຂ້າມ ຫຼັງຈາກທີ່ພຣະເຢຊູໄດ້ສຳເລັດພາລະກິດຂອງພຣະອົງ, ເປໂຕຈຶ່ງຄ່ອຍໆເຂົ້າໃຈຄວາມຈິງ ແລະ ຫຼັງຈາກນັ້ນກໍ່ຖືກເຮັດໃຫ້ສົມບູນ. ພຣະເຈົ້າທີ່ບັງເກີດເປັນມະນຸດມາເທິງແຜ່ນດິນໂລກພຽງແຕ່ເພື່ອເຮັດໃຫ້ໄລຍະທີ່ສຳຄັນ ແລະ ຈຳເປັນໃນພາລະກິດສຳເລັດລົງໃນຊ່ວງເວລາສັ້ນໆ, ບໍ່ແມ່ນເພື່ອດຳລົງຊີວິດເປັນເວລາຍາວໃນທ່າມກາງຜູ້ຄົນທີ່ຢູ່ເທິງແຜ່ນດິນໂລກ ໂດຍມີເຈດຕະນາທີ່ຈະເຮັດໃຫ້ພວກເຂົາສົມບູນ. ພຣະອົງບໍ່ໄດ້ປະຕິບັດພາລະກິດນັ້ນ. ພຣະອົງບໍ່ໄດ້ລໍຖ້າຈົນເຖິງເວລາທີ່ມະນຸດຖືກເຮັດໃຫ້ສົມບູນຢ່າງຄົບຖ້ວນເພື່ອສິ້ນສຸດພາລະກິດຂອງພຣະອົງ. ນັ້ນບໍ່ແມ່ນ

ເປົ້າໝາຍ ແລະ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະອົງ. ພຣະອົງພຽງແຕ່ມາເພື່ອປະຕິບັດພາລະກິດໄລຍະສັ້ນເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ, ບໍ່ແມ່ນເພື່ອປະຕິບັດພາລະກິດໄລຍະຍາວຫຼາຍເພື່ອເຮັດໃຫ້ມະນຸດຊາດສົມບູນ. ພາລະກິດແຫ່ງການຊ່ວຍມະນຸດຊາດໃຫ້ລອດຄົ້ນຄືຕົວແທນ, ສາມາດເລີ່ມຕົ້ນຍຸກໃໝ່. ມັນສາມາດສຳເລັດໄດ້ໃນຊ່ວງເວລາສັ້ນໆ. ແຕ່ການເຮັດໃຫ້ມະນຸດຊາດສົມບູນຈຳເປັນຕ້ອງໄດ້ນຳມະນຸດຂຶ້ນມາສູ່ລະດັບໃດໜຶ່ງ; ພາລະກິດດັ່ງກ່າວໃຊ້ເວລາດົນ. ມັນເປັນພາລະກິດທີ່ຕ້ອງຖືກເຮັດໃຫ້ສຳເລັດໂດຍພຣະວິນຍານຂອງພຣະເຈົ້າ, ແຕ່ມັນຖືກປະຕິບັດບົນພື້ນຖານຂອງຄວາມຈິງທີ່ຖືກກ່າວລະຫວ່າງພາລະກິດໃນເນື້ອໜັງ. ມັນຍັງຖືກປະຕິບັດຜ່ານການທີ່ພຣະອົງຍົກອັກຄະສາວົກຂຶ້ນເພື່ອປະຕິບັດພາລະກິດໃນການລ້ຽງດູໄລຍະຍາວ ເພື່ອບັນລຸເປົ້າໝາຍຂອງພຣະອົງໃນການເຮັດໃຫ້ມະນຸດຊາດສົມບູນ. ພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ເຮັດພາລະກິດນີ້. ພຣະອົງພຽງແຕ່ເວົ້າກ່ຽວກັບຫົນທາງແຫ່ງຊີວິດເພື່ອໃຫ້ຜູ້ຄົນເຂົ້າໃຈ ແລະ ພຣະອົງພຽງແຕ່ມອບຄວາມຈິງໃຫ້ແກ່ມະນຸດຊາດ, ແທນທີ່ຈະຢູ່ກັບມະນຸດໃນການປະຕິບັດຄວາມຈິງຢ່າງຕໍ່ເນື່ອງ, ເພາະນັ້ນບໍ່ໄດ້ຢູ່ໃນພັນທະກິດຂອງພຣະອົງ. ສະນັ້ນ, ພຣະອົງຈະບໍ່ຢູ່ກັບມະນຸດຈົນເຖິງມື້ທີ່ມະນຸດເຂົ້າໃຈຄວາມຈິງຢ່າງສົມບູນ ແລະ ຮັບເອົາຄວາມຈິງຢ່າງຄົບຖ້ວນ. ພາລະກິດຂອງພຣະອົງໃນເນື້ອໜັງຈະສິ້ນສຸດລົງ ເມື່ອມະນຸດເຂົ້າສູ່ເສັ້ນທາງແຫ່ງຄວາມເຊື່ອທີ່ຖືກຕ້ອງໃນພຣະເຈົ້າຢ່າງເປັນທາງການ, ເມື່ອມະນຸດກ້າວເຂົ້າສູ່ເສັ້ນທາງທີ່ຖືກຕ້ອງໃນການຖືກເຮັດໃຫ້ສົມບູນແບບ. ແນ່ນອນ ນີ້ຍັງເປັນເວລາທີ່ພຣະອົງຈະເອົາຊະນະຊາຕານຢ່າງຄົບຖ້ວນ ແລະ ມີໄຊເໜືອແຜ່ນດິນໂລກ. ພຣະອົງບໍ່ສົນໃຈວ່າ ໃນທີ່ສຸດແລ້ວມະນຸດໄດ້ເຂົ້າສູ່ຄວາມຈິງໃນເວລານັ້ນ ຫຼື ບໍ່ ຫຼື ພຣະອົງບໍ່ສົນໃຈວ່າຊີວິດຂອງມະນຸດຈະສູງສົ່ງ ຫຼື ຕ້ອຍຕໍ່າ. ບໍ່ມີຫຍັງໃນສິ່ງນັ້ນຈະເປັນສິ່ງທີ່ພຣະອົງໃນເນື້ອໜັງຄວນຈັດການ; ບໍ່ມີຫຍັງໃນສິ່ງນັ້ນຈະຢູ່ພາຍໃນພັນທະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ຫຼັງຈາກທີ່ພຣະອົງສຳເລັດພາລະກິດທີ່ພຣະອົງມຸ່ງໝາຍໄວ້, ພຣະອົງກໍ່ຈະສິ້ນສຸດພາລະກິດຂອງພຣະອົງໃນເນື້ອໜັງ. ສະນັ້ນ ພາລະກິດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດເປັນພຽງພາລະກິດທີ່ພຣະວິນຍານຂອງພຣະເຈົ້າບໍ່ສາມາດປະຕິບັດໂດຍກົງໄດ້ເທົ່ານັ້ນ. ຍິ່ງໄປກວ່ານັ້ນ, ມັນເປັນພາລະກິດໄລຍະສັ້ນແຫ່ງຄວາມລອດພົ້ນ, ບໍ່ແມ່ນພາລະກິດທີ່ພຣະອົງຈະປະຕິບັດເປັນໄລຍະຍາວເທິງແຜ່ນດິນໂລກ.

ການເພີ່ມຄວາມສາມາດຂອງພວກເຈົ້າບໍ່ໄດ້ຢູ່ພາຍໃນຂອບເຂດພາລະກິດຂອງເຮົາ. ເຮົາຂໍໃຫ້ພວກເຈົ້າປະຕິບັດພາລະກິດນີ້ ພຽງແຕ່ເພາະວ່າຄວາມສາມາດຂອງພວກເຈົ້າຕໍ່າເກີນໄປ. ໃນຄວາມຈິງແລ້ວ ນີ້ບໍ່ແມ່ນສ່ວນໜຶ່ງໃນພາລະກິດແຫ່ງຄວາມສົມບູນ; ກົງກັນຂ້າມ, ມັນເປັນພາລະກິດເພີ່ມເຕີມທີ່ກຳລັງປະຕິບັດໃນພວກເຈົ້າ. ພາລະກິດທີ່ກຳລັງສຳເລັດໃນພວກເຈົ້າໃນມື້ນີ້ແມ່ນຖືກປະຕິບັດຕາມສິ່ງທີ່ພວກເຈົ້າຕ້ອງການ. ມັນເປັນສະເພາະບຸກຄົນ ແລະ ບໍ່ແມ່ນເສັ້ນທາງທີ່ທຸກຄົນທີ່ກຳລັງຖືກເຮັດໃຫ້ສົມບູນຄວນເຂົ້າສູ່. ເພາະຄວາມສາມາດຂອງພວກເຈົ້າຕໍ່າກວ່າຜູ້ໃດໜຶ່ງທີ່ຖືກເຮັດໃຫ້ສົມບູນໃນອະດີດ, ເມື່ອພາລະກິດນີ້ຖືກປະຕິບັດໃນພວກເຈົ້າ, ມັນຈຶ່ງມີອຸປະສັກຫຼາຍຢ່າງເກີນໄປ. ເຮົາຢູ່ທ່າມກາງພວກເຈົ້າທີ່ກຳລັງເຮັດພາລະກິດເພີ່ມເຕີມນີ້ ເພາະເປົ້າໝາຍຂອງຄວາມສົມບູນແມ່ນແຕກຕ່າງກັນ.

ໂດຍແທ້ຈິງແລ້ວ ເມື່ອພຣະເຈົ້າມາເທິງແຜ່ນດິນໂລກ, ພຣະອົງຍັງຢູ່ພາຍໃນຂອບເຂດທີ່ເໝາະສົມຂອງພຣະອົງ ແລະ ປະຕິບັດພາລະກິດຂອງພຣະອົງ ໂດຍບໍ່ສົນໃຈເລື່ອງອື່ນທີ່ບໍ່ກ່ຽວຂ້ອງກັນ. ພຣະອົງບໍ່ໄດ້ມີສ່ວນຮ່ວມໃນບັນຫາຄອບຄົວ ຫຼື ເປັນສ່ວນໜຶ່ງໃນຊີວິດຂອງຜູ້ຄົນ. ພຣະອົງບໍ່ສົນໃຈກັບເລື່ອງທີ່ບໍ່ສຳຄັນດັ່ງກ່າວແທ້ໆ; ພວກມັນບໍ່ແມ່ນສ່ວນໜຶ່ງໃນພັນທະກິດຂອງພຣະອົງ. ແຕ່ຄວາມສາມາດຂອງພວກເຈົ້າຕໍ່າກວ່າສິ່ງທີ່ເຮົາຮຽກຮ້ອງຫຼາຍ, ແນ່ນອນ ມັນບໍ່ມີການປຽບທຽບກັນ, ມັນຈຶ່ງກໍ່ໃຫ້ເກີດອຸປະສັກທີ່ຮ້າຍແຮງຕໍ່ພາລະກິດ. ຍິ່ງໄປກວ່ານັ້ນ, ພາລະກິດນີ້ຕ້ອງຖືກປະຕິບັດທ່າມກາງຄົນທີ່ຢູ່ໃນດິນແດນຂອງປະເທດຈີນນີ້. ພວກເຈົ້າດ້ອຍການສຶກສາຫຼາຍຈົນເຮົາບໍ່ມີທາງເລືອກນອກຈາກຈະເວົ້າອອກ ແລະ ຮຽກຮ້ອງໃຫ້ພວກເຈົ້າອົບຮົມຕົນເອງ. ເຮົາໄດ້ບອກພວກເຈົ້າແລ້ວວ່ານີ້ຄືພາລະກິດເພີ່ມເຕີມ, ແຕ່ມັນຍັງເປັນສິ່ງທີ່ພວກເຈົ້າຕ້ອງໄດ້ຮັບ, ສິ່ງທີ່ຈະຊ່ວຍໃຫ້ພວກເຈົ້າຖືກເຮັດໃຫ້ສົມບູນ. ໃນຄວາມຈິງແລ້ວ, ການສຶກສາ, ຄວາມຮູ້ພື້ນຖານກ່ຽວກັບການປະພຶດຕົນ ແລະ ຄວາມຮູ້ພື້ນຖານກ່ຽວກັບຊີວິດລ້ວນແລ້ວແຕ່ເປັນສິ່ງທີ່ພວກເຈົ້າຄວນມີໂດຍທຳມະຊາດ; ເຮົາບໍ່ຄວນເວົ້າກັບພວກເຈົ້າກ່ຽວກັບສິ່ງເຫຼົ່ານີ້. ແຕ່ຍ້ອນພວກເຈົ້າບໍ່ມີສິ່ງເຫຼົ່ານີ້, ເຮົາຈຶ່ງບໍ່ມີທາງເລືອກນອກຈາກປະຕິບັດພາລະກິດເພື່ອປູກຝັງສິ່ງເຫຼົ່ານີ້ໃນພວກເຈົ້າ ຫຼັງຈາກທີ່ພວກເຈົ້າໄດ້ເກີດໃນໂລກແລ້ວ. ເຖິງແມ່ນພວກເຈົ້າຈະມີແນວຄິດຫຼາຍຢ່າງກ່ຽວກັບເຮົາ, ເຮົາກໍ່ຍັງຮຽກຮ້ອງສິ່ງນີ້ຈາກພວກເຈົ້າ, ເຮົາຍັງຮຽກຮ້ອງໃຫ້ພວກເຈົ້າເພີ່ມຄວາມສາມາດຂອງພວກເຈົ້າຂຶ້ນ. ມັນບໍ່ແມ່ນເຈດຕະນາຂອງເຮົາທີ່ຈະມາ ແລະ ປະຕິບັດພາລະກິດນີ້, ເພາະພາລະກິດຂອງເຮົາແມ່ນພຽງແຕ່ເພື່ອເອົາຊະນະພວກເຈົ້າ, ພຽງແຕ່ຮັບເອົາຄວາມເຊື່ອໝັ້ນຢ່າງສົມບູນຈາກພວກເຈົ້າ ໂດຍພິພາກສາພວກເຈົ້າ ແລ້ວຊີ້ໃຫ້ເຫັນຫົນທາງແຫ່ງຊີວິດທີ່ພວກເຈົ້າຄວນເຂົ້າສູ່. ເວົ້າອີກຢ່າງໜຶ່ງກໍ່ຄື ການທີ່ພວກເຈົ້າຈະໄດ້ຮັບການສຶກສາແບບໃດ ແລະ ການທີ່ພວກເຈົ້າຈະມີຄວາມຮູ້ກ່ຽວກັບຊີວິດ ຫຼື ບໍ່ ແມ່ນບໍ່ມີຫຍັງກ່ຽວຂ້ອງກັບເຮົາ ຖ້າບໍ່ແມ່ນຍ້ອນຂໍ້ແທ້ຈິງທີ່ວ່າເຮົາຈຳເປັນຕ້ອງເອົາຊະນະພວກເຈົ້າດ້ວຍພຣະທຳຂອງເຮົາ. ທຸກສິ່ງນີ້ກຳລັງຖືກເພີ່ມເຂົ້າເພື່ອຮັບປະກັນວ່າຈະບັນລຸຜົນຕາມມາໃນພາລະກິດແຫ່ງການເອົາຊະນະ ແລະ ເພື່ອເຫັນແກ່ການເຮັດໃຫ້ພວກເຈົ້າສົມບູນໃນພາຍຫຼັງ. ມັນບໍ່ແມ່ນສ່ວນໜຶ່ງໃນພາລະກິດແຫ່ງການເອົາຊະນະ. ເພາະພວກເຈົ້າມີຄວາມສາມາດຕໍ່າ ແລະ ພວກເຈົ້າຂີ້ຄ້ານ ແລະ ເມີນເສີຍ, ໂງ່ຈ້າ ແລະ ເຂົ້າໃຈຊ້າ, ບໍ່ມີຊີວິດຊີວາ ແລະ ປັນຍາອ່ອນ, ເພາະພວກເຈົ້າບໍ່ປົກກະຕິເປັນຢ່າງຍິ່ງ, ເຮົາຈຶ່ງຮຽກຮ້ອງໃຫ້ພວກເຈົ້າເພີ່ມຄວາມສາມາດຂອງພວກເຈົ້າຂຶ້ນກ່ອນ. ຄົນໃດກໍ່ຕາມທີ່ຕ້ອງການຖືກເຮັດໃຫ້ສົມບູນຕ້ອງບັນລຸຕາມເກນເງື່ອນໄຂໃດໜຶ່ງ. ເພື່ອທີ່ຈະຖືກເຮັດໃຫ້ສົມບູນ, ຄົນໆໜຶ່ງຕ້ອງມີຈິດໃຈທີ່ຊັດເຈນ ແລະ ເອົາຈິງເອົາຈັງ ແລະ ເຕັມໃຈທີ່ຈະດຳລົງຊີວິດຢ່າງມີຄວາມໝາຍ. ຖ້າເຈົ້າເປັນຄົນທີ່ບໍ່ເຕັມໃຈດຳລົງຊີວິດຢ່າງວ່າງເປົ່າ, ເປັນຄົນທີ່ສະແຫວງຫາຄວາມຈິງ, ເປັນຄົນທີ່ຈິງຈັງໃນທຸກສິ່ງທີ່ພວກເຂົາປະຕິບັດ ແລະ ເປັນຄົນທີ່ມີຄວາມເປັນມະນຸດທີ່ປົກກະຕິເປັນພິເສດ, ແລ້ວເຈົ້າກໍ່ບັນລຸເງື່ອນໄຂທີ່ຈະຖືກເຮັດໃຫ້ສົມບູນ.

ພາລະກິດນີ້ທີ່ກຳລັງປະຕິບັດທ່າມກາງພວກເຈົ້າແມ່ນກຳລັງປະຕິບັດໃນພວກເຈົ້າຕາມພາລະກິດທີ່ຕ້ອງຖືກເຮັດໃຫ້ສຳເລັດ. ຫຼັງຈາກເອົາຊະນະຜູ້ຄົນເຫຼົ່ານີ້, ກຸ່ມຄົນກໍ່ຈະຖືກເຮັດໃຫ້ສົມບູນ. ສະນັ້ນ,

ພາລະກິດສ່ວນໃຫຍ່ໃນປັດຈຸບັນກໍ່ຍັງເປັນການກະກຽມສຳລັບເປົ້າໝາຍໃນການເຮັດໃຫ້ພວກເຈົ້າສົມບູນ, ເພາະມີຫຼາຍຄົນທີ່ກຳລັງຫິວກະຫາຍຫາຄວາມຈິງ ເຊິ່ງເປັນຜູ້ທີ່ສາມາດຖືກເຮັດໃຫ້ສົມບູນໄດ້. ຖ້າພາລະກິດແຫ່ງການເອົາຊະນະຕ້ອງຖືກປະຕິບັດໃນພວກເຈົ້າ ແລະ ຫຼັງຈາກນັ້ນແມ່ນບໍ່ມີການປະຕິບັດພາລະກິດຕື່ມອີກ, ແລ້ວມັນຈະບໍ່ເປັນຈິງບໍທີ່ບາງຄົນທີ່ປາຖະໜາຫາຄວາມຈິງຈະໄດ້ຮັບເອົາມັນ? ພາລະກິດໃນປັດຈຸບັນແມ່ນແນໃສ່ເພື່ອເປີດເສັ້ນທາງສູ່ການເຮັດໃຫ້ຜູ້ຄົນສົມບູນໃນພາຍຫຼັງ. ເຖິງແມ່ນພາລະກິດຂອງເຮົາເປັນພຽງແຕ່ພາລະກິດແຫ່ງການເອົາຊະນະເທົ່ານັ້ນ, ເຖິງຢ່າງໃດກໍ່ຕາມຫົນທາງແຫ່ງຊີວິດທີ່ເຮົາກ່າວເຖິງແມ່ນເພື່ອກະກຽມເຮັດໃຫ້ຜູ້ຄົນສົມບູນໃນພາຍຫຼັງ. ພາລະກິດທີ່ມາຫຼັງຈາກການເອົາຊະນະແມ່ນເນັ້ນໃສ່ການເຮັດໃຫ້ຜູ້ຄົນສົມບູນ ແລະ ການເອົາຊະນະແມ່ນເກີດຂຶ້ນເພື່ອວາງພື້ນຖານແກ່ພາລະກິດແຫ່ງການເຮັດໃຫ້ສົມບູນ. ມະນຸດສາມາດຖືກເຮັດໃຫ້ສົມບູນພຽງແຕ່ຫຼັງຈາກທີ່ຖືກເອົາຊະນະ. ໃນຕອນນີ້, ໜ້າທີ່ຫຼັກຄືການເອົາຊະນະ; ຫຼັງຈາກນັ້ນ, ຄົນທີ່ສະແຫວງຫາ ແລະ ປາຖະໜາຫາຄວາມຈິງກໍ່ຈະຖືກເຮັດໃຫ້ສົມບູນ. ການຖືກເຮັດໃຫ້ສົມບູນກ່ຽວພັນກັບລັກສະນະທີ່ໃຊ້ງານໄດ້ຂອງທາງເຂົ້າຂອງຜູ້ຄົນ: ເຈົ້າມີຫົວໃຈທີ່ຮັກພຣະເຈົ້າບໍ? ເຈົ້າມີປະສົບການຫຼາຍສໍ່າໃດເມື່ອເຈົ້າຍ່າງໃນເສັ້ນທາງນີ້? ຄວາມຮັກຂອງເຈົ້າສຳລັບພຣະເຈົ້າບໍລິສຸດສໍ່າໃດ? ການປະຕິບັດຄວາມຈິງຂອງເຈົ້າຖືກຕ້ອງສໍ່າໃດ? ເພື່ອທີ່ຈະຖືກເຮັດໃຫ້ສົມບູນ, ຄົນໆໜຶ່ງຕ້ອງມີຄວາມຮູ້ພື້ນຖານກ່ຽວກັບທຸກລັກສະນະຂອງຄວາມເປັນມະນຸດ. ນີ້ແມ່ນເງື່ອນໄຂພື້ນຖານ. ທຸກຄົນທີ່ບໍ່ສາມາດຖືກເຮັດໃຫ້ສົມບູນຫຼັງຈາກທີ່ຖືກເອົາຊະນະກໍ່ຈະກາຍມາເປັນເຄື່ອງມືຮັບໃຊ້ ແລະ ຍັງຈະຖືກໂຍນລົງສູ່ທະເລສາບແຫ່ງໄຟ ແລະ ມາດໃນທີ່ສຸດ ແລະ ຍັງຈະຕົກລົງໃນເຫວເລິກທີ່ບໍ່ສິ້ນສຸດ, ເພາະອຸປະນິໄສຂອງເຈົ້າບໍ່ໄດ້ປ່ຽນແປງ ແລະ ເຈົ້າຍັງເປັນຂອງຊາຕານ. ຖ້າມະນຸດຂາດເງື່ອນໄຂສຳລັບຄວາມສົມບູນ, ແລ້ວເຂົາກໍ່ບໍ່ມີປະໂຫຍດຫຍັງເລີຍ, ເຂົາເປັນຂອງເສດເຫຼືອ, ເປັນເຄື່ອງມື, ເປັນສິ່ງທີ່ບໍ່ສາມາດທົນຕໍ່ການທົດລອງແຫ່ງໄຟໄດ້! ຕອນນີ້ ຄວາມຮັກຂອງເຈົ້າສຳລັບພຣະເຈົ້າມີຫຼາຍສໍ່າໃດ? ຄວາມກຽດຊັງຕົນເອງຂອງເຈົ້າມີຫຼາຍສໍ່າໃດ? ເຈົ້າຮູ້ຈັກຊາຕານເລິກເຊິ່ງສໍ່າໃດ? ພວກເຈົ້າໄດ້ເພີ່ມຄວາມຕັ້ງໃຈຂອງພວກເຈົ້າໃຫ້ເຂັ້ມແຂງແລ້ວບໍ? ຊີວິດຂອງເຈົ້າພາຍໃນຄວາມເປັນມະນຸດຂອງເຈົ້າຖືກຄວບຄຸມເປັນຢ່າງດີບໍ? ຊີວິດຂອງເຈົ້າໄດ້ປ່ຽນແປງແລ້ວບໍ? ເຈົ້າກຳລັງດຳລົງຊີວິດໃໝ່ບໍ? ທັດສະນະກ່ຽວກັບຊີວິດຂອງເຈົ້າໄດ້ປ່ຽນແປງແລ້ວບໍ? ຖ້າສິ່ງເຫຼົ່ານີ້ບໍ່ໄດ້ປ່ຽນແປງ, ເຈົ້າກໍ່ບໍ່ສາມາດຖືກເຮັດໃຫ້ສົມບູນໄດ້ ເຖິງແມ່ນວ່າເຈົ້າບໍ່ໄດ້ຖອຍ; ກົງກັນຂ້າມ ເຈົ້າພຽງແຕ່ຖືກເອົາຊະນະ. ເມື່ອມັນຮອດເວລາທີ່ຈະທົດສອບເຈົ້າ, ເຈົ້າກໍ່ຂາດຄວາມຈິງ, ຄວາມເປັນມະນຸດຂອງເຈົ້າບໍ່ປົກກະຕິ ແລະ ເຈົ້າຈະຕ່ອຍຕໍ່າຄືກັບສັດຮ້າຍທີ່ແບກຫາບ. ສິ່ງດຽວທີ່ເຈົ້າໄດ້ຮັບຈະເປັນການຖືກເອົາຊະນະ, ເຈົ້າເປັນພຽງແຕ່ວັດຖຸທີ່ເຮົາໄດ້ເອົາຊະນະ. ເຊັ່ນດຽວກັບລາ ຫຼັງຈາກທີ່ມັນຖືກແສ້ຂອງເຈົ້ານາຍ, ມັນກໍ່ຢ້ານ ແລະ ບໍ່ກ້າສະເໜີຕົວທຸກຄັ້ງທີ່ມັນເຫັນເຈົ້ານາຍ, ເຈົ້າກໍ່ເປັນພຽງແຕ່ລາທີ່ຖືກເອົາຊະນະ. ຖ້າຄົນໜຶ່ງຂາດລັກສະນະດ້ານບວກເຫຼົ່ານັ້ນ ແຕ່ກົງກັນຂ້າມແມ່ນບໍ່ດີ້ນລົນ ແລະ ຢ້ານກົວ, ບໍ່ມີຄວາມກ້າ ແລະ ລັງເລກັບທຸກສິ່ງ, ບໍ່ສາມາດແຍກແຍະສິ່ງໃດໜຶ່ງຢ່າງຊັດເຈນ, ບໍ່ສາມາດຍອມຮັບຄວາມຈິງ, ຍັງປາສະຈາກເສັ້ນທາງ

ສຳລັບການປະຕິບັດ ແລະ ປາສະຈາກແມ່ນແຕ່ຫົວໃຈທີ່ຮັກພຣະເຈົ້າ, ຖ້າຄົນໜຶ່ງບໍ່ມີຄວາມເຂົ້າໃຈກ່ຽວກັບວິທີການຮັກພຣະເຈົ້າ, ວິທີການດຳລົງຊີວິດທີ່ມີຄວາມໝາຍ ຫຼື ວິທີການເປັນຄົນທີ່ແທ້ຈິງ, ຄົນດັ່ງກ່າວຈະສາມາດເປັນພະຍານໃຫ້ພຣະເຈົ້າໄດ້ແນວໃດ? ສິ່ງນີ້ຈະສະແດງໃຫ້ເຫັນວ່າ ຊີວິດຂອງເຈົ້າມີຄຸນຄ່າເລັກນ້ອຍ ແລະ ເຈົ້າເປັນພຽງແຕ່ລາທີ່ຖືກເອົາຊະນະ. ເຈົ້າຈະຖືກເອົາຊະນະ, ແຕ່ນັ້ນກໍ່ພຽງແຕ່ໝາຍຄວາມວ່າ ເຈົ້າໄດ້ປະຖິ້ມມັງກອນແດງທີ່ຍິ່ງໃຫຍ່ ແລະ ປະຕິເສດທີ່ຈະຍອມຢູ່ພາຍໃຕ້ອຳນາດຂອງມັນ; ມັນຈະໝາຍຄວາມວ່າ ເຈົ້າເຊື່ອວ່າມີພຣະເຈົ້າ, ຕ້ອງການເຊື່ອຟັງແຜນການທຸກຢ່າງຂອງພຣະເຈົ້າ ແລະ ບໍ່ມີຄຳຕໍ່ວ່າໃດໆ. ແຕ່ສຳລັບລັກສະນະດ້ານບວກ, ເຈົ້າສາມາດດຳລົງຊີວິດຕາມພຣະທຳຂອງພຣະເຈົ້າ ແລະ ສຳແດງອອກເຖິງພຣະເຈົ້າບໍ? ຖ້າເຈົ້າບໍ່ມີສິ່ງໃດໃນບັນດາລັກສະນະເຫຼົ່ານີ້, ມັນກໍ່ໝາຍຄວາມວ່າ ເຈົ້າຍັງບໍ່ໄດ້ຖືກຮັບເອົາໂດຍພຣະເຈົ້າ ແລະ ເຈົ້າເປັນພຽງແຕ່ລາທີ່ຖືກເອົາຊະນະ. ບໍ່ມີຫຍັງທີ່ເປັນທີ່ປາຖະໜາໃນຕົວເຈົ້າ ແລະ ພຣະວິນຍານບໍລິສຸດກໍ່ບໍ່ໄດ້ປະຕິບັດພາລະກິດໃນຕົວເຈົ້າ. ຄວາມເປັນມະນຸດຂອງເຈົ້າຂາດເຂີນເກີນໄປ; ມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະໃຊ້ເຈົ້າ. ເຈົ້າຕ້ອງໄດ້ຮັບການເຫັນດີຈາກພຣະເຈົ້າ ແລະ ດີກວ່າສັດຮ້າຍທີ່ບໍ່ເຊື່ອຟັງ ແລະ ຄົນຕາຍທີ່ຍ່າງໄດ້ເຖິງຮ້ອຍເທົ່າ, ມີພຽງແຕ່ຄົນທີ່ມາເຖິງລະດັບນີ້ຈຶ່ງມີຄຸນສົມບັດທີ່ຈະຖືກເຮັດໃຫ້ສົມບູນ. ມີພຽງແຕ່ຄົນທີ່ມີຄວາມເປັນມະນຸດ ແລະ ຄວາມສຳນຶກເທົ່ານັ້ນຈຶ່ງເໝາະສົມທີ່ຈະຖືກພຣະເຈົ້າໃຊ້. ມີພຽງແຕ່ເມື່ອພວກເຈົ້າຖືກເຮັດໃຫ້ສົມບູນ, ພວກເຈົ້າຈຶ່ງຈະຖືວ່າເປັນມະນຸດ. ມີພຽງແຕ່ຄົນທີ່ຖືກເຮັດໃຫ້ສົມບູນເທົ່ານັ້ນຈຶ່ງເປັນຄົນດຳລົງຊີວິດຢ່າງມີຄວາມໝາຍ. ມີພຽງແຕ່ຄົນດັ່ງກ່າວຈຶ່ງສາມາດເປັນພະຍານໃຫ້ແກ່ພຣະເຈົ້າຢ່າງກ້ອງກັງວານຍິ່ງຂຶ້ນ.

# ພວກເຈົ້າຄວນວາງພອນທາງດ້ານສະຖານະ ໄວ້ທາງຂ້າງ ແລະ ເຂົ້າໃຈຄວາມປະສົງ ຂອງພຣະເຈົ້າເພື່ອນຳຄວາມລອດພົ້ນມາສູ່ມະນຸດ

ຈາກທັດສະນະຂອງມະນຸດ, ມັນເປັນໄປບໍ່ໄດ້ສຳລັບລູກຫຼານຂອງໂມອັບທີ່ຈະຖືກເຮັດໃຫ້ສົມບູນໄດ້ ຫຼື ພວກເຂົາມີຄຸນສົມບັດທີ່ຈະຖືກເຮັດເຊັ່ນນັ້ນ. ກົງກັນຂ້າມ, ບັນດາລູກຫຼານຂອງເດວິດແມ່ນມີຄວາມຫວັງ ແລະ ສາມາດຖືກເຮັດໃຫ້ສົມບູນຢ່າງແນ່ນອນ. ຖ້າວ່າບຸກຄົນໃດເປັນລູກຫຼານຂອງໂມອັບ, ພວກເຂົາກໍ່ຈະບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ເຖິງປັດຈຸບັນນີ້ ພວກເຈົ້າກໍຍັງບໍ່ຮູ້ຄວາມໝາຍຂອງພາລະກິດທີ່ຖືກປະຕິບັດທ່າມກາງພວກເຈົ້າ; ຈົນເຖິງຂັ້ນນີ້ ພວກເຈົ້າຍັງຖືເອົາຄວາມຄາດຫວັງໃນອະນາຄົດຂອງພວກເຈົ້າໄວ້ໃນຫົວໃຈຂອງພວກເຈົ້າ ແລະ ບໍ່ເຕັມໃຈທີ່ຈະສະຫຼະມັນ. ບໍ່ມີໃຜສົນໃຈວ່າເປັນຫຍັງມື້ນີ້ພຣະເຈົ້າຈຶ່ງໄດ້ເລືອກປະຕິບັດພາລະກິດກັບກຸ່ມຄົນທີ່ບໍ່ຄູ່ຄວນທີ່ສຸດຄືດັ່ງພວກເຈົ້າ. ມັນສາມາດເປັນໄປໄດ້ບໍ່ວ່າ ພຣະອົງໄດ້ເຮັດຜິດພາດໃນພາລະກິດນີ້? ພາລະກິດນີ້ໄດ້ຖືກເບິ່ງຂ້າມຊົ່ວໄລຍະໜຶ່ງບໍ? ເປັນຫຍັງພຣະເຈົ້າຈຶ່ງເຈາະຈົງລົງມາເພື່ອປະຕິບັດພາລະກິດຢູ່ທ່າມກາງພວກເຈົ້າ ໃນເມື່ອພຣະອົງຮູ້ມາດົນແລ້ວວ່າພວກເຈົ້າເປັນລູກຫຼານຂອງໂມອັບ? ພວກເຈົ້າບໍ່ເຄີຍຄິດກ່ຽວກັບເລື່ອງນີ້ບໍ? ພຣະເຈົ້າບໍ່ເຄີຍພິຈາລະນາເລື່ອງນີ້ ເມື່ອພຣະອົງປະຕິບັດພາລະກິດຂອງພຣະອົງບໍ? ພຣະອົງປະພຶດຕົນໃນລັກສະນະແບບໂອ້ອວດບໍ? ພຣະອົງບໍ່ຮູ້ວ່າພວກເຈົ້າເປັນລູກຫຼານຂອງໂມອັບມາຕັ້ງແຕ່ເລີ່ມຕົ້ນບໍ? ພວກເຈົ້າບໍ່ຮູ້ຈັກພິຈາລະນາສິ່ງເຫຼົ່ານີ້ບໍ? ແນວຄວາມຄິດຂອງພວກເຈົ້າຫາຍໄປໃສແລ້ວ? ຄວາມຄິດດ້ານບວກຂອງພວກເຈົ້າໄດ້ກາຍມາເປັນຄວາມຄິດທີ່ບໍ່ສາມາດປັບປຸງໄດ້ແລ້ວບໍ? ຄວາມສະຫຼາດ ແລະ ສະຕິປັນຍາຂອງພວກເຈົ້າຫາຍໄປໃສແລ້ວ? ມັນແມ່ນບໍວ່າ ພວກເຈົ້າມີຈຸດຢືນຢ່າງກວ້າງຂວາງຈົນວ່າພວກເຈົ້າບໍ່ສົນໃຈເລື່ອງເລັກນ້ອຍ? ພວກເຈົ້າໃສ່ໃຈຫຼາຍທີ່ສຸດຕໍ່ສິ່ງທີ່ຄາດຫວັງໃນອະນາຄົດຂອງພວກເຈົ້າ ແລະ ໂຊກຊະຕາຂອງພວກເຈົ້າເອງ, ແຕ່ສຳລັບສິ່ງອື່ນແລ້ວພວກເຈົ້າກັບບໍ່ມີຄວາມຮູ້ສຶກຫຍັງ, ປົກໜາ ແລະ ໂງ່ທີ່ສຸດ. ແມ່ນຫຍັງຢູ່ເທິງແຜ່ນດິນໂລກທີ່ພວກເຈົ້າເຊື່ອ? ຄວາມຄາດຫວັງໃນອະນາຄົດຂອງພວກເຈົ້າບໍ? ຫຼື ພຣະເຈົ້າ? ທຸກສິ່ງທີ່ເຈົ້າເຊື່ອບໍ່ແມ່ນຈຸດໝາຍປາຍທາງອັນສວຍງາມຂອງເຈົ້າບໍ? ມັນບໍ່ແມ່ນຄວາມຄາດຫວັງໃນອະນາຄົດຂອງເຈົ້າບໍ? ປັດຈຸບັນນີ້ເຈົ້າເຂົ້າໃຈວິຖີແຫ່ງຊີວິດຫຼາຍປານໃດ? ເຈົ້າບັນລຸຫຼາຍປານໃດແລ້ວ? ເຈົ້າຄິດວ່າພາລະກິດທີ່ກຳລັງປະຕິບັດຕໍ່ບັນດາລູກຫຼານຂອງໂມອັບໃນປັດຈຸບັນນີ້ແມ່ນປະຕິບັດເພື່ອເຮັດໃຫ້ພວກເຈົ້າອັບອາຍບໍ? ມັນຖືກຕັ້ງໃຈເຮັດເພື່ອເປີດເຜີຍຄວາມຂີ້ຮ້າຍຂອງພວກເຈົ້າບໍ? ມັນຖືກເຮັດດ້ວຍເຈດຕະນາເພື່ອໃຫ້ພວກເຈົ້າຍອມຮັບການຂ້ຽນຕີ ແລະ ຈາກນັ້ນກໍ່ໂຍນພວກເຈົ້າເຂົ້າໃນທະເລສາບແຫ່ງໄຟບໍ? ເຮົາບໍ່ເຄີຍເວົ້າວ່າພວກເຈົ້າບໍ່ມີຄວາມຄາດຫວັງໃນອະນາຄົດ, ແຮງໄກທີ່ພວກເຈົ້າຈະຖືກທຳລາຍ ຫຼື ທົນທຸກກັບການລົງໂທດຕະຫຼອດຊາດ; ເຮົາໄດ້ປະກາດເລື່ອງດັ່ງກ່າວແກ່ສາທາລະນະຊົນບໍ? ເຈົ້າເວົ້າວ່າເຈົ້າບໍ່ມີຄວາມຫວັງ, ແຕ່ນີ້ບໍ່ແມ່ນຂໍ້ສະຫຼຸບຂອງເຈົ້າເອງບໍ? ນີ້ບໍ່ແມ່ນຜົນກະທົບຈາກຄວາມຄິດຂອງເຈົ້າ

ເອງບໍ? ຂໍ້ສະຫຼຸບຂອງເຈົ້າເຊື່ອຖືໄດ້ບໍ? ຖ້າເຮົາເວົ້າວ່າເຈົ້າບໍ່ໄດ້ຮັບພອນ ແລ້ວເຈົ້າກໍ່ຈະຖືກທຳລາຍຢ່າງແນ່ນອນ; ຖ້າເຮົາເວົ້າວ່າເຈົ້າໄດ້ຮັບພອນ ເຈົ້າກໍ່ຈະບໍ່ຖືກທຳລາຍຢ່າງແນ່ນອນ. ເຮົາພຽງແຕ່ເວົ້າວ່າເຈົ້າເປັນລູກຫຼານຂອງໂມອັບເທົ່ານັ້ນ; ເຮົາບໍ່ໄດ້ເວົ້າວ່າ ເຈົ້າຈະຖືກທຳລາຍ. ມັນເປັນພຽງແຕ່ວ່າ ລູກຫຼານຂອງໂມອັບໄດ້ຖືກສາບແຊ່ງ ແລະ ເປັນມະນຸດທີ່ເສື່ອມຊາມປະເພດໜຶ່ງເທົ່ານັ້ນ. ຄວາມຜິດບາບທີ່ໄດ້ຖືກອ້າງອີງເຖິງກ່ອນໜ້ານີ້; ພວກເຈົ້າທຸກຄົນບໍ່ເປັນຄົນບາບບໍ? ບໍ່ແມ່ນຄົນບາບທຸກຄົນຖືກເຮັດໃຫ້ເສື່ອມຊາມໂດຍຊາຕານບໍ? ຄົນບາບທຸກຄົນບໍ່ໄດ້ຕໍ່ສູ້ ແລະ ກະບົດຕໍ່ພຣະເຈົ້າບໍ? ບັນດາຜູ້ທີ່ຕໍ່ຕ້ານພຣະເຈົ້າບໍ່ແມ່ນຄົນທີ່ຖືກສາບແຊ່ງບໍ? ຄົນບາບທຸກຄົນບໍ່ຕ້ອງຖືກທຳລາຍບໍ? ໃນກໍລະນີນີ້, ມີໃຜໃນທ່າມກາງຜູ້ຄົນທີ່ມີເນື້ອໜັງ ແລະ ເລືອດສາມາດຖືກຊ່ວຍໃຫ້ລອດພົ້ນໄດ້? ພວກເຈົ້າສາມາດມີຊີວິດລອດມາຮອດມື້ນີ້ໄດ້ແນວໃດ? ພວກເຈົ້າກາຍເປັນຄົນບໍ່ດີຍ້ອນວ່າພວກເຈົ້າເປັນລູກຫຼານຂອງໂມອັບ; ພວກເຈົ້າບໍ່ໄດ້ຖືວ່າເປັນມະນຸດ ຜູ້ທີ່ເປັນຄົນບາບຄືກັນບໍ? ພວກເຈົ້າຢູ່ມາຮອດທຸກມື້ນີ້ໄດ້ແນວໃດ? ເມື່ອເວົ້າເຖິງຄວາມສົມບູນ ພວກເຈົ້າກໍ່ດີໃຈ. ຫຼັງຈາກໄດ້ຍິນວ່າ ພວກເຈົ້າຕ້ອງປະສົບກັບຄວາມຍາກລຳບາກຄັ້ງໃຫຍ່, ພວກເຈົ້າຈະຮູ້ສຶກວ່າສິ່ງນີ້ເຮັດໃຫ້ພວກເຈົ້າໄດ້ຮັບພອນຫຼາຍຂຶ້ນ. ພວກເຈົ້າຄິດວ່າ ພວກເຈົ້າສາມາດກາຍມາເປັນຜູ້ໄດ້ຮັບໄຊສະນະຫຼັງຈາກທີ່ພົ້ນອອກຈາກຄວາມຍາກລຳບາກ ແລະ ນີ້ຍິ່ງເປັນການອວຍພອນອັນຍິ່ງໃຫຍ່ຂອງພຣະເຈົ້າ ແລະ ການຍົກຍ້ອງອັນຍິ່ງໃຫຍ່ຂອງພຣະອົງທີ່ມີຕໍ່ພວກເຈົ້າ. ແຕ່ເມື່ອກ່າວເຖິງໂມອັບ, ຄວາມວຸ້ນວາຍກໍເກີດຂຶ້ນໃນບັນດາພວກເຈົ້າ; ທັງຜູ້ໃຫຍ່ ແລະ ເດັກນ້ອຍຕ່າງກໍ່ຮູ້ສຶກໂສກເສົ້າຢ່າງແຮງ ແລະ ພວກເຈົ້າກໍ່ບໍ່ມີຄວາມສຸກໃນຫົວໃຈຂອງພວກເຈົ້າ; ພວກເຈົ້າທຸກຄົນເສຍໃຈທີ່ໄດ້ເກີດມາ. ພວກເຈົ້າບໍ່ເຂົ້າໃຈຄວາມໝາຍຂອງຂັ້ນຕອນນີ້ຂອງພາລະກິດທີ່ກຳລັງປະຕິບັດຕໍ່ລູກຫຼານຂອງໂມອັບ; ພວກເຈົ້າຮູ້ພຽງແຕ່ສະແຫວງຫາຕຳແໜ່ງທີ່ສູງສົ່ງເທົ່ານັ້ນ ແລະ ເມື່ອໃດກໍຕາມທີ່ພວກເຈົ້າຄິດວ່າພວກເຈົ້າໝົດຫວັງ ພວກເຈົ້າກໍທໍ້ຖອຍ. ເມື່ອເວົ້າເຖິງຄວາມສົມບູນ ແລະ ຈຸດໝາຍປາຍທາງໃນອະນາຄົດ, ພວກເຈົ້າກໍ່ຮູ້ສຶກດີໃຈ; ພວກເຈົ້າໃຊ້ຄວາມເຊື່ອໃນພຣະເຈົ້າຂອງພວກເຈົ້າເພື່ອຮັບການອວຍພອນ ແລະ ເພື່ອວ່າພວກເຈົ້າຈະສາມາດມີຈຸດໝາຍປາຍທາງທີ່ດີໄດ້. ປັດຈຸບັນນີ້ ບາງຄົນຮູ້ສຶກຢ້ານກົວຍ້ອນສະຖານະຂອງພວກເຂົາ. ຍ້ອນວ່າພວກເຂົາມີຄຸນຄ່າຕໍ່າ ແລະ ມີຖານະຕໍ່າ, ພວກເຂົາຈຶ່ງບໍ່ຕ້ອງການສະແຫວງຫາເພື່ອຖືກເຮັດໃຫ້ສົມບູນ. ການເຮັດໃຫ້ສົມບູນແມ່ນໄດ້ຍົກຂຶ້ນມາເວົ້າກ່ອນ ແລະ ຫຼັງຈາກນັ້ນຈຶ່ງເວົ້າເຖິງລູກຫຼານຂອງໂມອັບ, ດັ່ງນັ້ນ ຜູ້ຄົນຈຶ່ງໄດ້ປະຖິ້ມເສັ້ນທາງແຫ່ງຄວາມສົມບູນດັ່ງກ່າວ. ນີ້ກໍ່ຍ້ອນວ່າ ຈາກຕົ້ນຈົນຈົບພວກເຈົ້າແມ່ນບໍ່ເຄີຍຮູ້ຄວາມໝາຍຂອງພາລະກິດນີ້ ຫຼື ພວກເຈົ້າໄດ້ໃສ່ໃຈຕໍ່ຄວາມສຳຄັນຂອງມັນ. ພວກເຈົ້າແມ່ນມີວຸດທິພາວະຕໍ່າຫຼາຍ ແລະ ບໍ່ສາມາດທົນຕໍ່ຄວາມຫຍຸ້ງຍາກແມ່ນແຕ່ໜ້ອຍດຽວ. ເມື່ອພວກເຈົ້າເຫັນວ່າສະຖານະຂອງພວກເຈົ້າເອງນັ້ນຕໍ່າຫຼາຍ ພວກເຈົ້າກໍ່ຮູ້ສຶກທໍ້ຖອຍ ແລະ ໝົດຄວາມໝັ້ນໃຈທີ່ຈະສະແຫວງຫາຕໍ່ໄປ. ຜູ້ຄົນພຽງຖືວ່າ ການໄດ້ຮັບພຣະຄຸນ ແລະ ການມີຄວາມສະຫງົບສຸກເປັນສັນຍາລັກຂອງການເຊື່ອໃນພຣະເຈົ້າ ແລະ ເຫັນການສະແຫວງຫາພອນເປັນພື້ນຖານຂອງການເຊື່ອໃນພຣະເຈົ້າ. ມີໜ້ອຍຄົນທີ່ສະແຫວງຫາເພື່ອຮູ້ຈັກພຣະເຈົ້າ ຫຼື ສະແຫວງຫາການ

ປ່ຽນແປງອຸປະນິໄສຂອງພວກເຂົາ. ໃນຄວາມເຊື່ອຂອງພວກເຂົາ ຜູ້ຄົນສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າປະທານຈຸດໝາຍປາຍທາງທີ່ເໝາະສົມໃຫ້ແກ່ພວກເຂົາ ແລະ ພຣະຄຸນທັງໝົດທີ່ພວກເຂົາຕ້ອງການ ເພື່ອເຮັດໃຫ້ພຣະອົງເປັນຜູ້ຮັບໃຊ້ຂອງພວກເຂົາ, ເພື່ອເຮັດໃຫ້ພຣະອົງຮັກສາຄວາມສຳພັນຢ່າງຜາສຸກ ແລະ ເປັນກັນເອງກັບພວກເຂົາ ເພື່ອວ່າ ບໍ່ວ່າຈະຢູ່ໃນເວລາໃດກໍຕາມ ຈະບໍ່ເຄີຍມີຂໍ້ຂັດແຍ້ງໃດໆລະຫວ່າງພວກເຂົາ. ນັ້ນກໍຄື ການເຊື່ອໃນພຣະເຈົ້າຂອງພວກເຂົາຮຽກຮ້ອງໃຫ້ພຣະອົງສັນຍາທີ່ຈະປະຕິບັດຕາມເງື່ອນໄຂຂອງພວກເຂົາ ແລະ ເພື່ອປະທານໃຫ້ພວກເຂົາທຸກສິ່ງທີ່ພວກເຂົາອະທິຖານຫາ, ເພື່ອໃຫ້ສອດຄ່ອງກັບພຣະທຳທີ່ພວກເຂົາອ່ານໃນພຣະຄຳພີ "ເຮົາຈະຮັບຟັງຄຳອະທິຖານໝົດທຸກຢ່າງຂອງພວກເຈົ້າ". ພວກເຂົາຄາດຫວັງວ່າພຣະເຈົ້າຈະບໍ່ຕັດສິນໃຜ ຫຼື ຈັດການກັບໃຜ, ຍ້ອນວ່າພຣະອົງເປັນພຣະເຢຊູພຣະຜູ້ຊ່ວຍໃຫ້ພົ້ນທີ່ມີຄວາມເມດຕາສະເໝີ, ເປັນຜູ້ທີ່ຮັກສາຄວາມສຳພັນທີ່ດີກັບມະນຸດຢູ່ທຸກເວລາ ແລະ ທຸກບ່ອນ. ນີ້ຄືວິທີທາງທີ່ພວກເຂົາເຊື່ອໃນພຣະເຈົ້າ: ພວກເຂົາຮຽກຮ້ອງທຸກສິ່ງຈາກພຣະເຈົ້າຢ່າງບໍ່ອັບອາຍ, ໂດຍເຊື່ອວ່າບໍ່ວ່າພວກເຂົາຈະກະບົດ ຫຼື ເຊື່ອຟັງກໍ່ຕາມ ພຣະອົງຈະປະທານທຸກສິ່ງໃຫ້ກັບພວກເຂົາຢ່າງຕາບອດ. ພວກເຂົາໄດ້ແຕ່ "ທວງໜີ້" ຈາກພຣະເຈົ້າຢ່າງບໍ່ຢຸດຢັ້ງ, ໂດຍເຊື່ອວ່າພຣະອົງຕ້ອງ "ໃຊ້ໜີ້" ພວກເຂົາໂດຍບໍ່ມີການຕໍ່ວ່າຕໍ່ຂານ ແລະ ຫຼາຍໄປກວ່ານັ້ນ, ໃຫ້ໃຊ້ຄືນເປັນສອງເທົ່າ, ພວກເຂົາຄິດວ່າ ບໍ່ວ່າພຣະເຈົ້າຈະເຄີຍໄດ້ຫຍັງຈາກພວກເຂົາ ຫຼື ບໍ່ກໍ່ຕາມ, ພຣະອົງພຽງແຕ່ສາມາດຢູ່ໃນການຄວບຄຸມຂອງພວກເຂົາເທົ່ານັ້ນ ແລະ ພຣະອົງບໍ່ສາມາດປັ້ນແຕ່ງຜູ້ຄົນໄດ້ຕາມໃຈມັກ, ແຮງໄກທີ່ຈະສາມາດເປີດເຜີຍສະຕິປັນຍາ ແລະ ອຸປະນິໄສອັນຊອບທຳຂອງພຣະອົງໃຫ້ກັບຜູ້ຄົນ ທີ່ໄດ້ຖືກປິດລັບເປັນເວລາຫຼາຍປີ ຕາມຄວາມຕ້ອງການຂອງພຣະອົງ ແລະ ປາສະຈາກການອະນຸຍາດຈາກພວກເຂົາ. ພວກເຂົາພຽງແຕ່ສາລະພາບບາບຂອງພວກເຂົາກັບພຣະເຈົ້າໂດຍເຊື່ອວ່າພຣະເຈົ້າຈະໃຫ້ອະໄພພວກເຂົາ ແລະ ບໍ່ສາມາດເບື່ອໜ່າຍກັບການເຮັດແບບນັ້ນ ແລະ ສິ່ງນີ້ກໍຈະດຳເນີນໄປແບບນີ້ຕະຫຼອດການ. ພວກເຂົາໄດ້ແຕ່ສັ່ງພຣະເຈົ້າ ໂດຍເຊື່ອວ່າ ພຣະອົງຈະເຊື່ອຟັງພວກເຂົາ, ຍ້ອນວ່າມັນຖືກບັນທຶກໄວ້ໃນພຣະຄຳພີແລ້ວວ່າ ພຣະເຈົ້າບໍ່ໄດ້ມາເພື່ອໃຫ້ມະນຸດຮັບໃຊ້, ແຕ່ມາເພື່ອຮັບໃຊ້ມະນຸດ ແລະ ທີ່ພຣະອົງມາກໍ່ເພື່ອມາເປັນຄົນຮັບໃຊ້ມະນຸດ. ບໍ່ແມ່ນພວກເຈົ້າເຊື່ອແບບນີ້ສະເໝີມາບໍ? ເມື່ອພວກເຈົ້າບໍ່ໄດ້ຫຍັງຈາກພຣະເຈົ້າ ພວກເຈົ້າກໍ່ປາດຖະໜາຢາກແລ່ນໜີ. ເມື່ອພວກເຈົ້າບໍ່ເຂົ້າໃຈສິ່ງໃດໜຶ່ງ ພວກເຈົ້າກໍ່ບໍ່ພໍໃຈ ແລະ ເຖິງກັບຮ້ອງດ່າພຣະອົງສາລະພັດສິ່ງ. ພວກເຈົ້າບໍ່ຍອມໃຫ້ພຣະເຈົ້າເອງສະແດງສະຕິປັນຍາ ແລະ ຄວາມມະຫັດສະຈັນຂອງພຣະອົງໄດ້ຢ່າງເຕັມທີ່ເລີຍ, ກົງກັນຂ້າມ ພວກເຈົ້າພຽງແຕ່ຕ້ອງການຄວາມສະບາຍໃຈ ແລະ ຄວາມສະດວກສະບາຍຊົ່ວຄາວເທົ່ານັ້ນ. ຈົນເຖິງປັດຈຸບັນນີ້, ທັດສະນະຄະຕິໃນການເຊື່ອພຣະເຈົ້າຂອງພວກເຈົ້າກໍຍັງເປັນຄືກັບທັດສະນະແບບເກົ່າຢູ່. ຖ້າພຣະເຈົ້າສະແດງໃຫ້ພວກເຈົ້າເຫັນຄວາມສະຫງ່າງາມພຽງເລັກນ້ອຍ ພວກເຈົ້າກໍ່ບໍ່ພໍໃຈ. ຕອນນີ້ ພວກເຈົ້າເຫັນລັກແລ້ວບໍວ່າ ວຸດທິພາວະຂອງພວກເຈົ້ານັ້ນເປັນແນວໃດ? ຢ່າຄິດວ່າພວກເຈົ້າທຸກຄົນພັກດີກັບພຣະເຈົ້າໃນເມື່ອຄວາມຈິງແລ້ວທັດສະນະແບບເກົ່າຂອງພວກເຈົ້ານັ້ນແມ່ນຍັງບໍ່ໄດ້ປ່ຽນແປງ. ເມື່ອບໍ່ມີຫຍັງເກີດຂຶ້ນກັບເຈົ້າ, ເຈົ້າກໍເຊື່ອວ່າທຸກ

ສິ່ງດຳເນີນໄປຢ່າງລາບລື້ນ ແລະ ຄວາມຮັກຂອງເຈົ້າທີ່ມີຕໍ່ພຣະເຈົ້າກໍເຖິງຈຸດສູງສຸດ. ເມື່ອມີບາງສິ່ງເລັກນ້ອຍເກີດຂຶ້ນກັບເຈົ້າ, ເຈົ້າກໍ່ຕົກລົງສູ່ແດນມໍລະນາ. ນີ້ແມ່ນເຈົ້າຈິງຮັກພັກດີຕໍ່ພຣະເຈົ້າບໍ?

ຖ້າຂັ້ນຕອນສຸດທ້າຍຂອງພາລະກິດແຫ່ງການເອົາຊະນະແມ່ນຖືກເລີ່ມຕົ້ນຢູ່ອິດສະຣາເອນ, ແລ້ວພາລະກິດແຫ່ງການເອົາຊະນະກໍ່ຈະບໍ່ມີຄວາມໝາຍຫຍັງ. ພາລະກິດຈະມີຄວາມໝາຍທີ່ສຸດກໍ່ຕໍ່ເມື່ອມັນຖືກປະຕິບັດໃນປະເທດຈີນ ແລະ ເມື່ອມັນຖືກປະຕິບັດກັບພວກເຈົ້າ. ພວກເຈົ້າແມ່ນຄົນທີ່ຕໍ່າຕ້ອຍທີ່ສຸດ, ຄົນທີ່ມີສະຖານະບໍ່ສຳຄັນທີ່ສຸດ. ພວກເຈົ້າແມ່ນຄົນທີ່ມີລະດັບຕໍ່າສຸດໃນສັງຄົມນີ້ ແລະ ພວກເຈົ້າຄືຄົນທີ່ຮູ້ຈັກພຣະເຈົ້າໃນເບື້ອງຕົ້ນຢ່າງໜ້ອຍທີ່ສຸດ. ພວກເຈົ້າແມ່ນຄົນທີ່ໄດ້ຫ່າງເຫີນຈາກພຣະເຈົ້າທີ່ສຸດ ແລະ ເປັນຜູ້ທີ່ໄດ້ຮັບຄວາມເສຍຫາຍຫຼາຍທີ່ສຸດ. ຍ້ອນວ່າຂັ້ນຕອນນີ້ຂອງພາລະກິດແມ່ນເພື່ອການເອົາຊະນະເທົ່ານັ້ນ, ບໍ່ແມ່ນມັນເໝາະສົມທີ່ສຸດແລ້ວບໍ ສຳລັບພວກເຈົ້າທີ່ຈະຖືກເລືອກເພື່ອເປັນພະຍານໃນອະນາຄົດ? ຖ້າຂັ້ນຕອນທຳອິດຂອງພາລະກິດແຫ່ງການເອົາຊະນະ ບໍ່ໄດ້ປະຕິບັດໃນຕົວພວກເຈົ້າແລ້ວ, ມັນກໍ່ຈະເປັນການຍາກທີ່ຈະກ້າວໄປສູ່ພາລະກິດຂອງການເອົາຊະນະໃນອະນາຄົດໄດ້, ຍ້ອນວ່າພາລະກິດແຫ່ງການເອົາຊະນະໃນອະນາຄົດຈະບັນລຸຜົນໄດ້ກໍຕ້ອງອີງຕາມຄວາມຈິງຂອງພາລະກິດທີ່ປະຕິບັດໃນວັນນີ້. ພາລະກິດແຫ່ງການເອົາຊະນະໃນປັດຈຸບັນ ເປັນພຽງການເລີ່ມຕົ້ນຂອງພາລະກິດແຫ່ງການເອົາຊະນະທັງໝົດ. ພວກເຈົ້າເປັນກຸ່ມທຳອິດທີ່ຈະຖືກເອົາຊະນະ; ພວກເຈົ້າເປັນຕົວແທນຂອງມະນຸດຊາດທັງໝົດທີ່ຈະຖືກເອົາຊະນະ. ຄົນທີ່ມີຄວາມຮູ້ທີ່ແທ້ຈິງ, ພວກເຂົາຈະເຫັນວ່າ ພາລະກິດທັງໝົດທີ່ພຣະເຈົ້າປະຕິບັດໃນວັນນີ້ແມ່ນຍິ່ງໃຫຍ່ ແລະ ຈະເຫັນວ່າພຣະອົງບໍ່ພຽງແຕ່ເຮັດໃຫ້ມະນຸດຮູ້ຈັກການກະບົດຂອງພວກເຂົາເອງເທົ່ານັ້ນ, ແຕ່ພຣະອົງຍັງເປີດເຜີຍສະຖານະຂອງພວກເຂົາອີກດ້ວຍ. ວັດຖຸປະສົງ ແລະ ຄວາມໝາຍແຫ່ງພຣະທຳຂອງພຣະອົງບໍ່ແມ່ນເພື່ອເຮັດໃຫ້ຄົນທໍ້ແທ້ໃຈ ຫຼື ເພື່ອທຳລາຍພວກເຂົາ. ມັນແມ່ນເພື່ອເຮັດໃຫ້ພວກເຂົາໄດ້ຮັບແສງສະຫວ່າງ ແລະ ຮັບຄວາມລອດພົ້ນຜ່ານພຣະທຳຂອງພຣະອົງ; ມັນແມ່ນການປຸກຈິດວິນຍານຂອງມະນຸດຜ່ານພຣະທຳຂອງພຣະອົງ. ນັບຕັ້ງແຕ່ການສ້າງໂລກຈົນມາຮອດປັດຈຸບັນ, ມະນຸດໄດ້ອາໄສຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ໂດຍບໍ່ຮູ້ ແລະ ບໍ່ເຊື່ອວ່າມີພຣະເຈົ້າ. ເຊິ່ງຄົນເຫຼົ່ານີ້ສາມາດຖືກຮ່ວມເຂົ້າໃນການໄຖ່ບາບອັນຍິ່ງໃຫຍ່ຂອງພຣະເຈົ້າ ແລະ ສາມາດຖືກຍົກຂຶ້ນຢ່າງສູງໂດຍພຣະເຈົ້າເພື່ອສະແດງໃຫ້ເຫັນເຖິງຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ; ບັນດາຜູ້ທີ່ເຂົ້າໃຈຢ່າງແທ້ຈິງຈະເຊື່ອໃນສິ່ງນີ້. ແລ້ວບັນດາຜູ້ທີ່ບໍ່ມີຄວາມຮູ້ດັ່ງກ່າວເດ? ພວກເຂົາຈະເວົ້າວ່າ “ອ້າ, ພຣະເຈົ້າເວົ້າວ່າ ພວກເຮົາເປັນລູກຫຼານຂອງໂມອັບ; ພຣະອົງກ່າວສິ່ງນີ້ດ້ວຍພຣະອົງເອງ. ພວກເຮົາຍັງຈະໄດ້ຮັບຜົນຕາມມາທີ່ດີບໍ? ພວກເຮົາເປັນລູກຫຼານຂອງໂມອາບ ແລະ ພວກເຮົາໄດ້ຕໍ່ຕ້ານພຣະອົງໃນອາດີດ. ພຣະເຈົ້າໄດ້ມາເພື່ອກ່າວໂທດພວກເຮົາ; ເຈົ້າບໍ່ເຫັນບໍວ່າ ພຣະເຈົ້າໄດ້ຕັດສິນພວກເຮົາຕະຫຼອດ ຕັ້ງແຕ່ເລີ່ມຕົ້ນຜຸ້ນມາ? ເນື່ອງຈາກວ່າພວກເຮົາຕໍ່ຕ້ານກັບພຣະເຈົ້າ ນີ້ຄືວິທີທີ່ພວກເຮົາຄວນຖືກຂ້ຽນຕີ”. ຄຳເວົ້າເຫຼົ່ານີ້ຖືກຕ້ອງບໍ? ມື້ນີ້ພຣະເຈົ້າຕັດສິນພວກເຈົ້າ, ຂ້ຽນຕີພວກເຈົ້າ ແລະ ກ່າວໂທດພວກເຈົ້າ, ແຕ່ພວກເຈົ້າຕ້ອງຮູ້ຈຸດປະສົງໃນການກ່າວໂທດຂອງພວກເຈົ້າ ນັ້ນກໍ່ເພື່ອເຮັດໃຫ້ພວກເຈົ້າຮູ້ຈັກຕົວພວກເຈົ້າເອງ.

ພຣະອົງກ່າວໂທດ, ສາບແຊ່ງ, ຕັດສິນ ແລະ ຂ້ຽນຕີເພື່ອວ່າເຈົ້າຈະໄດ້ຮູ້ຈັກຕົວເອງ, ເພື່ອວ່າອຸປະນິໄສຂອງເຈົ້າອາດຈະປ່ຽນແປງ ແລະ ຍິ່ງໄປກວ່ານັ້ນ ກໍ່ເພື່ອວ່າ ເຈົ້າອາດຈະຮູ້ຄຸນຄ່າຂອງຕົວເຈົ້າເອງ ແລະເຫັນວ່າການກະທຳຂອງພຣະເຈົ້າທັງໝົດນັ້ນຊອບທຳ ແລະ ສອດຄ່ອງກັບອຸປະນິໄສຂອງພຣະອົງ ແລະອີງຕາມຄວາມຕ້ອງການຂອງພາລະກິດຂອງພຣະອົງ, ວ່າພຣະອົງປະຕິບັດພາລະກິດຕາມແຜນການໄຖ່ບາບມະນຸດຂອງພຣະອົງ ແລະ ພຣະອົງເປັນພຣະເຈົ້າຜູ້ທ່ຽງທຳຜູ້ທີ່ຮັກມະນຸດ, ຊ່ວຍມະນຸດໃຫ້ລອດພົ້ນ, ຕັດສິນ ແລະ ຂ້ຽນຕີມະນຸດ. ຖ້າເຈົ້າຮູ້ພຽງແຕ່ວ່າເຈົ້າເປັນຄົນມີສະຖານະຕໍ່າຕ້ອຍ, ວ່າເຈົ້າເປັນຄົນເສື່ອມຊາມ ແລະ ບໍ່ເຊື່ອຟັງ, ແຕ່ກັບບໍ່ຮູ້ວ່າພຣະເຈົ້າປາດຖະໜາປະຕິບັດພາລະກິດການໄຖ່ບາບມະນຸດຂອງພຣະອົງແບບລຽບງ່າຍຜ່ານທາງການພິພາກສາ ແລະ ການຂ້ຽນຕີທີ່ພຣະອົງປະຕິບັດໃນຕົວເຈົ້າໃນປັດຈຸບັນນີ້, ເຈົ້າກໍ່ຈະບໍ່ມີທາງໄດ້ຮັບປະສົບການ, ແຮງໄກທີ່ເຈົ້າຈະສາມາດດຳເນີນຕໍ່ໄປຂ້າງໜ້າໄດ້. ພຣະເຈົ້າບໍ່ໄດ້ມາເພື່ອຂ້າ ຫຼື ທຳລາຍ, ແຕ່ມາເພື່ອຕັດສິນ, ສາບແຊ່ງ, ຂ້ຽນຕີ ແລະ ຊ່ວຍໃຫ້ລອດພົ້ນ. ຈົນກວ່າແຜນການຄຸ້ມຄອງ 6.000 ປີຂອງພຣະອົງຈະຈົບສິ້ນລົງ ກ່ອນທີ່ພຣະອົງຈະເປີດເຜີຍຜົນສະຫຼຸບແຕ່ລະປະເພດຂອງມະນຸດ ພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກແມ່ນເພື່ອຄວາມລອດພົ້ນ; ຈຸດປະສົງຂອງມັນກໍ່ເພື່ອເຮັດໃຫ້ຜູ້ທີ່ຮັກພຣະອົງຢ່າງແທ້ຈິງສົມບູນທັງໝົດ ແລະເຮັດໃຫ້ພວກເຂົາຍອມຢູ່ພາຍໃຕ້ການປົກຄອງຂອງພຣະອົງ. ບໍ່ວ່າພຣະເຈົ້າຈະຊ່ວຍມະນຸດໃຫ້ລອດພົ້ນດ້ວຍວິທີໃດກໍຕາມ, ທັງໝົດແມ່ນເພື່ອເຮັດໃຫ້ພວກເຂົາຫຼຸດພົ້ນອອກຈາກທຳມະຊາດທີ່ຊົ່ວຮ້າຍດັ່ງເດີມຂອງພວກເຂົາ; ນັ້ນກໍ່ຄື ພຣະອົງຊ່ວຍພວກເຂົາໃຫ້ລອດພົ້ນໂດຍເຮັດໃຫ້ພວກເຂົາສະແຫວງຫາຊີວິດ. ຖ້າພວກເຂົາບໍ່ສະແຫວງຫາຊີວິດດັ່ງກ່າວ ພວກເຂົາກໍ່ຈະບໍ່ມີທາງທີ່ຈະຮັບເອົາການໄຖ່ບາບຂອງພຣະເຈົ້າໄດ້. ການໄຖ່ບາບແມ່ນພາລະກິດຂອງພຣະເຈົ້າເອງ ແລະ ການສະແຫວງຫາຊີວິດຄືສິ່ງທີ່ມະນຸດຕ້ອງປະຕິບັດເພື່ອຮັບເອົາການໄຖ່ບາບນັ້ນ. ໃນສາຍຕາຂອງມະນຸດ, ການໄຖ່ບາບຄືຄວາມຮັກຂອງພຣະເຈົ້າ ແລະ ຄວາມຮັກຂອງພຣະເຈົ້າບໍ່ສາມາດເປັນການຂ້ຽນຕີ, ການຕັດສິນ, ແລະ ການສາບແຊ່ງໄດ້; ການໄຖ່ບາບຕ້ອງປະກອບດ້ວຍຄວາມຮັກ, ຄວາມເມດຕາ ແລະ ຍິ່ງໄປກວ່ານັ້ນ, ຕ້ອງມີຄຳເວົ້າປອບໃຈ ແລະ ພອນອັນໃຫຍ່ຫຼວງທີ່ປະທານໂດຍພຣະເຈົ້າ. ຄົນເຊື່ອວ່າ ເມື່ອພຣະເຈົ້າຊ່ວຍມະນຸດໃຫ້ລອດພົ້ນ, ພຣະອົງປະຕິບັດເຊັ່ນນັ້ນໂດຍສຳຜັດພວກເຂົາດ້ວຍພອນ ແລະ ພຣະຄຸນຂອງພຣະອົງ ເພື່ອວ່າ ພວກເຂົາຈະໄດ້ມອບຫົວໃຈຂອງພວກເຂົາໃຫ້ກັບພຣະເຈົ້າ. ນັ້ນໝາຍຄວາມວ່າ, ການສຳຜັດມະນຸດຂອງພຣະອົງກໍ່ຄືການຊ່ວຍພວກເຂົາໃຫ້ລອດພົ້ນ. ການລອດພົ້ນແບບນີ້ແມ່ນຖືກປະຕິບັດໂດຍການບັນລຸຕາມຂໍ້ຕົກລົງ. ມີພຽງເມື່ອພຣະເຈົ້າປະທານໃຫ້ພວກເຂົາເປັນຮ້ອຍເທົ່າເທົ່ານັ້ນມະນຸດຈຶ່ງຈະຍອມຮັບນາມຂອງພຣະເຈົ້າ ແລະ ພະຍາຍາມເຮັດດີເພື່ອພຣະອົງ ແລະ ນຳສະຫງ່າລາສີມາໃຫ້ພຣະອົງ. ນີ້ບໍ່ແມ່ນຄວາມປະສົງຂອງພຣະເຈົ້າສຳລັບມະນຸດ. ພຣະເຈົ້າລົງມາເພື່ອປະຕິບັດພາລະກິດເທິງແຜ່ນດິນໂລກກໍ່ເພື່ອຊ່ວຍມະນຸດທີ່ເສື່ອມຊາມໃຫ້ລອດພົ້ນ; ສິ່ງນີ້ຄືຄວາມເປັນຈິງ. ຖ້າບໍ່ແມ່ນຄວາມຈິງ, ແນ່ນອນວ່າ ພຣະອົງຈະບໍ່ມາປະຕິບັດພາລະກິດຂອງພຣະອົງດ້ວຍພຣະອົງເອງ. ໃນອະດີດ, ຫົນທາງແຫ່ງການລອດພົ້ນຂອງພຣະອົງປະກອບດ້ວຍການສະແດງເຖິງຄວາມຮັກ ແລະ ຄວາມເມດຕາ

ຢ່າງໃຫຍ່ຫຼວງ, ເຊັ່ນ: ພຣະອົງມອບທຸກສິ່ງໃຫ້ກັບຊາຕານເພື່ອແລກປ່ຽນກັບມະນຸດຊາດທັງໝົດ. ປັດຈຸບັນແມ່ນບໍ່ຄືອະດີດ: ຄວາມລອດພົ້ນທີ່ໄດ້ປະທານໃຫ້ກັບພວກເຈົ້າໃນປັດຈຸບັນເກີດຂຶ້ນໃນເວລາຍຸກສຸດທ້າຍ ໃນລະຫວ່າງການຈັດແບ່ງຜູ້ຄົນຕາມປະເພດຂອງພວກເຂົາ; ວິທີທາງແຫ່ງການລອດພົ້ນຂອງພວກເຈົ້າບໍ່ແມ່ນຄວາມຮັກ ຫຼື ຄວາມເມດຕາ, ແຕ່ແມ່ນການຂ້ຽນຕີ ແລະ ການພິພາກສາ ເພື່ອວ່າມະນຸດອາດຈະຖືກຊ່ວຍໃຫ້ລອດພົ້ນໄດ້ຢ່າງສົມບູນ. ດັ່ງນັ້ນ, ສິ່ງດຽວທີ່ພວກເຈົ້າຈະໄດ້ຮັບກໍຄືການຕີສອນ, ການພິພາກສາ ແລະ ການຂ້ຽນຕີຢ່າງໄຮ້ຄວາມປານີ, ແຕ່ຮູ້ໄວ້ວ່າ ໃນການຂ້ຽນຕີຢ່າງໄຮ້ຄວາມປານີນີ້ ບໍ່ແມ່ນການລົງໂທດແມ່ນແຕ່ໜ້ອຍດຽວເລີຍ. ບໍ່ວ່າພຣະທຳຂອງເຮົາຈະຮຸນແຮງພຽງໃດກໍຕາມ ຫຼື ພຣະທຳເລັກນ້ອຍທີ່ພວກເຈົ້າໄດ້ຮັບ ປາກົດວ່າຈະໄຮ້ຄວາມເມດຕາທີ່ສຸດສຳລັບພວກເຈົ້າ ແລະ ບໍ່ວ່າເຮົາຈະໂກດຮ້າຍພຽງໃດກໍຕາມ, ສິ່ງທີ່ເກີດຂຶ້ນກັບພວກເຈົ້າກໍ່ຄືພຣະທຳແຫ່ງການສິດສອນ ແລະ ເຮົາບໍ່ໄດ້ຕັ້ງໃຈທີ່ຈະທຳຮ້າຍພວກເຈົ້າ ຫຼື ເຮັດໃຫ້ພວກເຈົ້າເຖິງແກ່ຄວາມຕາຍ. ນີ້ບໍ່ແມ່ນຂໍ້ເທັດຈິງທັງໝົດບໍ? ຮູ້ໄວ້ວ່າ ທຸກມື້ນີ້, ບໍ່ວ່າຈະເປັນການພິພາກສາຢ່າງຊອບທຳ ຫຼື ການຫຼໍ່ຫຼອມ ແລະ ການຂ້ຽນຕີຢ່າງໄຮ້ຄວາມປານີ, ທັງໝົດນີ້ແມ່ນເພື່ອຄວາມລອດພົ້ນຂອງມວນມະນຸດ. ບໍ່ວ່າໃນປັດຈຸບັນນີ້ຈະມີການຈັດແບ່ງຄົນຕາມປະເພດຂອງພວກເຂົາແບບໃດ ຫຼື ປະເພດຂອງມະນຸດຈະຖືກຈັດວາງອອກແບບໃດກໍຕາມ, ຈຸດປະສົງຂອງພຣະທຳ ແລະ ພາລະກິດທັງໝົດຂອງພຣະເຈົ້າແມ່ນເພື່ອຊ່ວຍບັນດາຜູ້ທີ່ຮັກພຣະອົງຢ່າງແທ້ຈິງໃຫ້ລອດພົ້ນ. ການພິພາກສາຢ່າງຊອບທຳກໍ່ເພື່ອເຮັດໃຫ້ມະນຸດບໍລິສຸດ, ການຫຼໍ່ຫຼອມຢ່າງໄຮ້ຄວາມເມດຕາກໍ່ເພື່ອຊຳລະລ້າງພວກເຂົາ, ພຣະທຳ ຫຼື ການຂ້ຽນຕີຢ່າງຮຸນແຮງກໍ່ເພື່ອເຮັດໃຫ້ບໍລິສຸດ ແລະ ເພື່ອຄວາມລອດພົ້ນ. ສະນັ້ນ ວິທີການໄຖ່ບາບໃນປັດຈຸບັນນີ້ຈະບໍ່ຄືກັນກັບໃນອະດີດ. ປັດຈຸບັນ, ພວກເຈົ້າຖືກນຳໄປສູ່ຄວາມລອດພົ້ນຜ່ານການພິພາກສາຢ່າງຊອບທຳ ແລະ ເປັນເຄື່ອງມືທີ່ດີສຳລັບຈັດແບ່ງພວກເຈົ້າແຕ່ລະຄົນອອກຕາມປະເພດຂອງຕົນ. ຍິ່ງໄປກວ່ານັ້ນ ການຂ້ຽນຕີຢ່າງໂຫດຮ້າຍຄືຫົນທາງແຫ່ງຄວາມລອດພົ້ນຢ່າງແທ້ຈິງຂອງພວກເຈົ້າ ແລ້ວພວກເຈົ້າຈະມີຫຍັງເວົ້າອີກໃນການຜະເຊີນກັບການຂ້ຽນຕີ ແລະ ການພິພາກສາດັ່ງກ່າວນີ້? ພວກເຈົ້າບໍ່ໄດ້ມີຄວາມສຸກກັບຄວາມລອດພົ້ນຕັ້ງແຕ່ຕົ້ນຈົນຈົບບໍ? ພວກເຈົ້າໄດ້ເຫັນພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ຮູ້ຈັກລິດທານຸພາບ ແລະ ສະຕິປັນຍາຂອງພຣະອົງ; ນອກຈາກນັ້ນ, ພວກເຈົ້າຍັງໄດ້ປະສົບກັບການຂ້ຽນຕີ ແລະ ການລົງວິໄນຂອງພຣະອົງຊໍ້າແລ້ວຊໍ້າອີກ. ເຖິງຢ່າງໃດກໍຕາມ ພວກເຈົ້າກໍ່ຍັງໄດ້ຮັບພຣະຄຸນຢ່າງສູງ ບໍ່ແມ່ນບໍ? ພອນຂອງພວກເຈົ້າບໍ່ຍິ່ງໃຫຍ່ກວ່າພອນຂອງຄົນອື່ນບໍ? ພຣະຄຸນຂອງພວກເຈົ້ານັ້ນຍິ່ງໃຫຍ່ກວ່າສະຫງ່າລາສີ ແລະ ຄວາມຮັ່ງມີທີ່ຊາໂລມອນໄດ້ຮັບອີກ! ໃຫ້ຄິດເບິ່ງ: ຖ້າເຈດຕະນາໃນການມາຂອງເຮົາແມ່ນເພື່ອກ່າວໂທດ ແລະ ລົງໂທດພວກເຈົ້າ ແຕ່ບໍ່ແມ່ນເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນ, ແລ້ວວັນຂອງພວກເຈົ້າຈະລອດມາຮອດທຸກມື້ນີ້ບໍ? ພວກເຈົ້າ ເປັນຄົນຜິດບາບທີ່ມີເລືອດ ແລະ ເນື້ອຈະສາມາດມີຊີວິດລອດມາຮອດທຸກມື້ນີ້ບໍ? ຖ້າເປົ້າໝາຍຂອງເຮົາແມ່ນພຽງການລົງໂທດພວກເຈົ້າເທົ່ານັ້ນ, ແລ້ວເປັນຫຍັງເຮົາຈຶ່ງຕ້ອງບັງເກີດເປັນເນື້ອໜັງ ແລະ ເລີ່ມດຳເນີນກິດຈະການທີ່ຍິ່ງໃຫຍ່ດັ່ງກ່າວນັ້ນ? ເຮົາພຽງໃຊ້ພຣະທຳຂໍ້ດຽວກໍສາມາດລົງໂທດພວກເຈົ້າໄດ້

ແລ້ວ ບໍ່ແມ່ນບໍ? ເຮົາຍັງຈະຕ້ອງການທຳລາຍພວກເຈົ້າຫຼັງຈາກທີ່ໄດ້ກ່າວໂທດພວກເຈົ້າອີກບໍ? ພວກເຈົ້າຍັງບໍ່ເຊື່ອພຣະທຳເຫຼົ່ານີ້ຂອງເຮົາອີກບໍ? ເຮົາສາມາດຊ່ວຍມະນຸດໃຫ້ລອດພົ້ນພຽງຜ່ານຄວາມຮັກ ແລະ ຄວາມເມດຕາເທົ່ານັ້ນບໍ່? ຫຼື ເຮົາສາມາດພຽງໃຊ້ແຕ່ການຄຶງກາງແຂນເພື່ອຊ່ວຍມະນຸດໃຫ້ລອດພົ້ນເທົ່ານັ້ນບໍ? ອຸປະນິໄສອັນຊອບທຳຂອງເຮົາບໍ່ເອື້ອອຳນວຍໃນການເຮັດໃຫ້ມະນຸດເຊື່ອຟັງຢ່າງສົມບູນຫຼາຍຂຶ້ນບໍ? ມັນບໍ່ສາມາດຊ່ວຍມະນຸດໃຫ້ລອດພົ້ນໄດ້ຢ່າງສົມບູນຫຼາຍຂຶ້ນແທ້ບໍ?

ເຖິງແມ່ນວ່າ ພຣະທຳຂອງເຮົາອາດຈະເຂັ້ມງວດ, ພຣະທຳທັງໝົດເຫຼົ່ານັ້ນແມ່ນຖືກກ່າວເພື່ອຄວາມລອດພົ້ນຂອງມະນຸດ, ນັ້ນກໍຍ້ອນວ່າ ເຮົາພຽງກ່າວພຣະທຳ ແລະ ບໍ່ໄດ້ລົງໂທດເນື້ອໜັງຂອງມະນຸດ. ພຣະທຳເຫຼົ່ານີ້ເຮັດໃຫ້ມະນຸດດຳລົງຊີວິດຢູ່ໃນແສງສະຫວ່າງ, ເພື່ອຮູ້ວ່າແສງສະຫວ່າງມີຢູ່ຈິງ, ເພື່ອຮູ້ວ່າແສງສະຫວ່າງນັ້ນປະເສີດ ແລະ ຍິ່ງໄປກວ່ານັ້ນ, ກໍເພື່ອຮູ້ວ່າພຣະທຳເຫຼົ່ານີ້ມີປະໂຫຍດຕໍ່ມະນຸດ ແລະ ພ້ອມນັ້ນ ກໍເພື່ອຮູ້ວ່າ ພຣະເຈົ້າຄືຄວາມລອດພົ້ນ. ເຖິງແມ່ນວ່າ ເຮົາໄດ້ກ່າວພຣະທຳຫຼາຍປະການກ່ຽວກັບການຂ້ຽນຕີ ແລະ ການພິພາກສາ, ແຕ່ພຣະທຳເຫຼົ່ານັ້ນແມ່ນບໍ່ໄດ້ປາກົດໃນຕົວພວກເຈົ້າຢ່າງແທ້ຈິງ. ເຮົາໄດ້ມາເພື່ອປະຕິບັດພາລະກິດຂອງເຮົາ, ເພື່ອກ່າວພຣະທຳຂອງເຮົາ ແລະ ເຖິງແມ່ນວ່າ ພຣະທຳຂອງເຮົາອາດຈະເຂັ້ມງວດ, ພວກມັນກໍຖືກກ່າວເພື່ອພິພາກສາຄວາມເສື່ອມຊາມ ແລະ ການກະບົດຂອງພວກເຈົ້າ. ວັດຖຸປະສົງຂອງເຮົາໃນການເຮັດສິ່ງນີ້ຄືການຊ່ວຍມະນຸດໃຫ້ພົ້ນຈາກການຄວບຄຸມຂອງຊາຕານ; ເຮົາກຳລັງໃຊ້ພຣະທຳຂອງເຮົາຊ່ວຍມະນຸດໃຫ້ລອດພົ້ນ; ວັດຖຸປະສົງຂອງເຮົາບໍ່ແມ່ນເພື່ອທຳຮ້າຍມະນຸດດ້ວຍພຣະທຳຂອງເຮົາ. ພຣະທຳຂອງເຮົາເຂັ້ມງວດກໍ່ເພື່ອບັນລຸຜົນໃນການປະຕິບັດພາລະກິດຂອງເຮົາ. ມີພຽງຜ່ານການປະຕິບັດພາລະກິດໃນທາງນີ້ເທົ່ານັ້ນມະນຸດຈຶ່ງຈະສາມາດຮູ້ຈັກຕົວຕົນຂອງພວກເຂົາເອງ ແລະ ໜີອອກຈາກນິໄສກະບົດຂອງພວກເຂົາໄດ້. ຄວາມໝາຍອັນເລິກເຊິ່ງທີ່ສຸດຂອງພາລະກິດແຫ່ງພຣະທຳແມ່ນເພື່ອອະນຸຍາດໃຫ້ຄົນນຳເອົາຄວາມຈິງໄປສູ່ການປະຕິບັດຫຼັງຈາກທີ່ໄດ້ເຂົ້າໃຈຄວາມຈິງ, ເພື່ອບັນລຸໃນການປ່ຽນແປງນິໄສຂອງພວກເຂົາ ແລະ ເພື່ອບັນລຸຄວາມຮູ້ກ່ຽວກັບຕົວພວກເຂົາເອງ ແລະ ພາລະກິດຂອງພຣະເຈົ້າ. ມີພຽງການປະຕິບັດພາລະກິດຜ່ານການກ່າວພຣະທຳເທົ່ານັ້ນຈຶ່ງຈະສາມາດເຮັດໃຫ້ການສື່ສານລະຫວ່າງພຣະເຈົ້າກັບມະນຸດເປັນໄປໄດ້ ແລະ ມີພຽງພຣະທຳເທົ່ານັ້ນທີ່ສາມາດອະທິບາຍຄວາມຈິງໄດ້. ການປະຕິບັດພາລະກິດໃນວິທີນີ້ຄືຫົນທາງທີ່ດີທີ່ສຸດສຳລັບການເອົາຊະນະມະນຸດ; ນອກຈາກການກ່າວພຣະທຳຕ່າງໆແລ້ວ ກໍ່ບໍ່ມີວິທີອື່ນໃດອີກທີ່ສາມາດເຮັດໃຫ້ມະນຸດເຂົ້າໃຈຄວາມຈິງ ແລະ ພາລະກິດຂອງພຣະເຈົ້າໄດ້ຢ່າງຊັດເຈນ. ດັ່ງນັ້ນ ໃນຂັ້ນຕອນສຸດທ້າຍແຫ່ງພາລະກິດຂອງພຣະອົງ, ພຣະເຈົ້າກ່າວຕໍ່ມະນຸດເພື່ອເປີດເຜີຍຄວາມຈິງ ແລະ ຄວາມເລິກລັບທັງໝົດທີ່ພວກເຂົາຍັງບໍ່ເຂົ້າໃຈເທື່ອ, ອະນຸຍາດໃຫ້ພວກເຂົາໄດ້ຮັບເສັ້ນທາງທີ່ແທ້ຈິງ ແລະ ຊີວິດຈາກພຣະເຈົ້າ ແລະ ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ວັດຖຸປະສົງແຫ່ງພາລະກິດຂອງພຣະເຈົ້າກັບມະນຸດແມ່ນເພື່ອໃຫ້ພວກເຂົາສາມາດປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ມັນຖືກປະຕິບັດເພື່ອນຳຄວາມລອດພົ້ນມາສູ່ພວກເຂົາ, ສະນັ້ນ ໃນຊ່ວງເວລາທີ່ພຣະອົງຊ່ວຍມະນຸດໃຫ້ລອດພົ້ນ ພຣະອົງບໍ່ໄດ້ປະຕິບັດພາລະກິດໃນການລົງໂທດພວກເຂົາ.

ໃນລະຫວ່າງການຊ່ວຍມະນຸດໃຫ້ລອດພົ້ນ, ພຣະເຈົ້າບໍ່ໄດ້ລົງໂທດຄົນຊົ່ວຮ້າຍ ຫຼື ໃຫ້ລາງວັນຄົນດີ ຫຼື ພຣະອົງເປີດເຜີຍຈຸດໝາຍປາຍທາງໃຫ້ກັບທຸກຄົນ. ກົງກັນຂ້າມ, ມີພຽງແຕ່ຫຼັງຈາກທີ່ຂັ້ນຕອນສຸດທ້າຍແຫ່ງພາລະກິດຂອງພຣະອົງສຳເລັດເທົ່ານັ້ນ ພຣະອົງຈຶ່ງຈະປະຕິບັດພາລະກິດແຫ່ງການລົງໂທດຄົນຊົ່ວຮ້າຍ ແລະ ມອບລາງວັນໃຫ້ກັບຄົນດີ, ແລ້ວເມື່ອນັ້ນພຣະອົງຈຶ່ງຈະເປີດເຜີຍຈຸດຈົບຂອງທຸກຄົນ. ບັນດາຜູ້ທີ່ຖືກລົງໂທດຈະແມ່ນບັນດາຜູ້ທີ່ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ ແລະ ບັນດາຜູ້ທີ່ຖືກຊ່ວຍໃຫ້ລອດພົ້ນຈະແມ່ນບັນດາຜູ້ທີ່ໄດ້ຮັບການໄຖ່ບາບຈາກພຣະເຈົ້າໃນລະຫວ່າງການໄຖ່ບາບມະນຸດຂອງພຣະອົງ. ໃນຂະນະທີ່ພາລະກິດແຫ່ງການໄຖ່ບາບຂອງພຣະເຈົ້າ, ບັນດາຜູ້ທີ່ສາມາດຖືກຊ່ວຍໃຫ້ລອດພົ້ນທັງໝົດຈະຖືກຊ່ວຍໃຫ້ລອດຈົນເຖິງທີ່ສຸດ, ບໍ່ມີໃຜໃນພວກເຂົາທີ່ຈະຖືກປະຖິ້ມ, ເນື່ອງຈາກວ່າ ວັດຖຸປະສົງຂອງພາລະກິດຂອງພຣະເຈົ້າແມ່ນເພື່ອຊ່ວຍມະນຸດໃຫ້ລອດພົ້ນ. ໃນລະຫວ່າງການໄຖ່ບາບມະນຸດຂອງພຣະເຈົ້າ, ບັນດາຜູ້ທີ່ບໍ່ສາມາດບັນລຸການປ່ຽນແປງນິໄສຂອງພວກເຂົາ ແລະ ບັນດາຜູ້ທີ່ບໍ່ສາມາດເຊື່ອຟັງພຣະເຈົ້າໄດ້ຢ່າງສົມບູນທັງໝົດ, ຈະກາຍເປັນຜູ້ທີ່ຖືກລົງໂທດທັງໝົດ. ໃນຂັ້ນຕອນນີ້ຂອງພາລະກິດ, ພາລະກິດແຫ່ງພຣະທຳຈະເປີດເຜີຍໃຫ້ກັບມະນຸດທຸກເສັ້ນທາງ ແລະ ຄວາມເລິກລັບທີ່ພວກເຂົາບໍ່ເຂົ້າໃຈ, ເພື່ອວ່າມະນຸດຈະສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຂໍ້ຮຽກຮ້ອງຂອງພຣະເຈົ້າທີ່ມີຕໍ່ມະນຸດ ແລະ ເພື່ອວ່າ ພວກເຂົາຈະສາມາດມີເງື່ອນໄຂນຳເອົາພຣະທຳຂອງພຣະເຈົ້າໄປປະຕິບັດຕາມ ແລະ ບັນລຸການປ່ຽນແປງນິໄສຂອງພວກເຂົາ. ພຣະເຈົ້າໃຊ້ແຕ່ພຣະທຳເທົ່ານັ້ນໃນການປະຕິບັດພາລະກິດຂອງພຣະອົງ ແລະ ບໍ່ໄດ້ລົງໂທດຄົນຍ້ອນວ່າພວກເຂົາມີການກະບົດພຽງເລັກນ້ອຍ, ຍ້ອນວ່າຕອນນີ້ແມ່ນເວລາຂອງພາລະກິດແຫ່ງຄວາມລອດພົ້ນ. ຖ້າທຸກຄົນທີ່ກະບົດຖືກລົງໂທດ, ກໍ່ຈະບໍ່ມີໃຜທີ່ຈະມີໂອກາດຖືກຊ່ວຍໃຫ້ລອດພົ້ນໄດ້; ພວກເຂົາທັງໝົດຈະຖືກລົງໂທດ ແລະ ຕົກສູ່ແດນມໍລະນາ. ວັດຖຸປະສົງຂອງພຣະທຳໃນການຕັດສິນມະນຸດແມ່ນເພື່ອໃຫ້ພວກເຂົາຮູ້ຈັກຕົວຕົນຂອງພວກເຂົາເອງ ແລະ ຍອມເຊື່ອຟັງພຣະເຈົ້າ; ບໍ່ແມ່ນເພື່ອລົງໂທດພວກເຂົາດ້ວຍການພິພາກສາດັ່ງກ່າວ. ໃນລະຫວ່າງການປະຕິບັດພາລະກິດແຫ່ງພຣະທຳ, ຫຼາຍຄົນຈະເປີດເຜີຍການກະບົດ ແລະ ການຕໍ່ຕ້ານຂອງພວກເຂົາອອກມາ ພ້ອມທັງຄວາມບໍ່ເຊື່ອຟັງຂອງພວກເຂົາທີ່ມີຕໍ່ພຣະເຈົ້າຜູ້ບັງເກີດເປັນມະນຸດ. ແຕ່ເຖິງຢ່າງໃດກໍຕາມ ພຣະອົງຈະບໍ່ລົງໂທດຄົນເຫຼົ່ານີ້ທັງໝົດຍ້ອນສິ່ງນີ້, ແຕ່ ກົງກັນຂ້າມ ພຣະອົງພຽງແຕ່ຈະປະຖິ້ມບັນດາຜູ້ທີ່ເສື່ອມຊາມທີ່ສຸດ ແລະ ຜູ້ທີ່ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້. ພຣະອົງຈະເອົາເນື້ອໜັງຂອງພວກເຂົາໃຫ້ຊາຕານ ແລະ ໃນບາງກໍລະນີ ກໍຈະທຳລາຍເນື້ອໜັງຂອງພວກເຂົາ. ສ່ວນຄົນທີ່ເຫຼືອແມ່ນຈະສືບຕໍ່ປະຕິບັດຕາມ ແລະ ປະສົບກັບການຈັດການ ແລະ ການລິຮານ. ຖ້າໃນຂະນະທີ່ພວກເຂົາປະຕິບັດຕາມ ພວກເຂົາຍັງບໍ່ສາມາດຍອມຮັບການຈັດການ ແລະ ການລິຮານ ແລະ ກາຍເປັນຄົນເສື່ອມຊາມຂຶ້ນເລື້ອຍໆ, ແລ້ວພວກເຂົາກໍ່ຈະສູນເສຍໂອກາດໃນຄວາມລອດພົ້ນຂອງພວກເຂົາ. ແຕ່ລະຄົນທີ່ຍອມຮັບການເອົາຊະນະດ້ວຍພຣະທຳຂອງພຣະເຈົ້າກໍ່ຈະມີໂອກາດພຽງພໍເພື່ອຄວາມລອດພົ້ນ. ການຊ່ວຍຄົນເຫຼົ່ານີ້ໃຫ້ລອດພົ້ນຈະສະແດງໃຫ້ພວກເຂົາເຫັນເຖິງຄວາມເມດຕາປານີສູງສຸດຂອງພຣະອົງ. ເວົ້າອີກຢ່າງກໍຄື ພວກເຂົາຈະ

ຖືກສະແດງໃຫ້ເຫັນເຖິງຄວາມອິດທົນສູງສຸດຂອງພຣະເຈົ້າ. ຕາບໃດທີ່ຄົນຫັນຫຼັງໃຫ້ກັບເສັ້ນທາງທີ່ຜິດ, ຕາບໃດທີ່ຄົນສາມາດກັບໃຈ, ພຣະເຈົ້າກໍ່ຈະມອບໂອກາດໃຫ້ພວກເຂົາໄດ້ຮັບຄວາມລອດພົ້ນຈາກພຣະອົງ. ຢ່າງທຳອິດກໍ່ຄື ເມື່ອຜູ້ຄົນກະບົດຕໍ່ພຣະເຈົ້າ, ພຣະອົງບໍ່ໄດ້ປາດຖະໜາເຮັດໃຫ້ພວກເຂົາເຖິງແກ່ຄວາມຕາຍ, ແຕ່ກົງກັນຂ້າມ ພຣະອົງເຮັດທຸກວິທີທາງເພື່ອຊ່ວຍພວກເຂົາໃຫ້ລອດພົ້ນ. ຖ້າຫາກບາງຄົນບໍ່ມີພື້ນທີ່ສຳລັບຄວາມລອດພົ້ນແທ້ໆ, ແລ້ວພຣະເຈົ້າກໍຈະປະຖິ້ມພວກເຂົາ. ເຫດຜົນທີ່ພຣະເຈົ້າຊັກຊ້າໃນການລົງໂທດບາງຄົນກໍ່ຍ້ອນວ່າພຣະອົງຕ້ອງການຊ່ວຍທຸກຄົນທີ່ສາມາດຊ່ວຍໄດ້. ພຣະອົງຕັດສິນ, ໃຫ້ແສງສະຫວ່າງ ແລະ ນຳພາຜູ້ຄົນດ້ວຍພຣະທຳເທົ່ານັ້ນ ແລະ ບໍ່ໄດ້ໃຊ້ໄມ້ຄ້ອນຕີພວກເຂົາໃຫ້ຕາຍ. ການໃຊ້ພຣະທຳເພື່ອຊ່ວຍມະນຸດໃຫ້ລອດພົ້ນແມ່ນວັດຖຸປະສົງ ແລະ ຄວາມໝາຍຂອງຂັ້ນຕອນສຸດທ້າຍຂອງພາລະກິດ.

# ມະນຸດທີ່ຈຳກັດພຣະເຈົ້າໃນແນວຄິດຂອງເຂົາ ຈະສາມາດຮັບການເປີດເຜີຍຂອງພຣະອົງໄດ້ແນວໃດ?

ພາລະກິດຂອງພຣະເຈົ້າສືບຕໍ່ກ້າວໄປຂ້າງໜ້າຢູ່ສະເໝີ ແລະ ເຖິງແມ່ນວ່າຈຸດປະສົງຂອງພາລະກິດຂອງພຣະເຈົ້າບໍ່ໄດ້ປ່ຽນແປງ, ວິທີການທີ່ພຣະອົງໃຊ້ເພື່ອດຳເນີນພາລະກິດແມ່ນປ່ຽນແປງຕະຫຼອດເວລາ ເຊິ່ງໝາຍຄວາມວ່າຜູ້ຄົນທີ່ຕິດຕາມພຣະເຈົ້າກໍປ່ຽນແປງເຊັ່ນດຽວກັນ. ຍິ່ງພຣະເຈົ້າປະຕິບັດພາລະກິດຫຼາຍຂຶ້ນ ຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າກໍຍິ່ງທົ່ວເຖິງຫຼາຍຂຶ້ນ. ການປ່ຽນແປງທີ່ສອດຄ່ອງກັນກໍເກີດຂຶ້ນໃນອຸປະນິໄສຂອງມະນຸດເຊັ່ນກັນ ດ້ວຍການປຸກຈາກພາລະກິດຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ ມັນແມ່ນຍ້ອນພາລະກິດຂອງພຣະເຈົ້າທີ່ປ່ຽນແປງຢູ່ເປັນປະຈຳ, ຜູ້ຄົນທີ່ບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ ແລະ ຄົນໂງ່ຈ້າເຫຼົ່ານັ້ນທີ່ບໍ່ຮູ້ຈັກຄວາມຈິງຈຶ່ງກາຍມາເປັນຄົນທີ່ຕໍ່ຕ້ານພຣະເຈົ້າ. ພາລະກິດຂອງພຣະເຈົ້າບໍ່ເຄີຍສອດຄ່ອງກັບແນວຄວາມຄິດຂອງມະນຸດ ເພາະພາລະກິດຂອງພຣະອົງໃໝ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ ແລະ ພຣະອົງບໍ່ເຄີຍເຮັດຊໍ້າພາລະກິດແບບເກົ່າ, ແຕ່ກົງກັນຂ້າມ ພຣະອົງດຳເນີນພາລະກິດແບບໃໝ່ທີ່ບໍ່ເຄີຍເຮັດມາກ່ອນຢ່າງກ້າວໜ້າ. ໃນເມື່ອພຣະເຈົ້າບໍ່ເຮັດຊໍ້າພາລະກິດຂອງພຣະອົງ ແລະ ມະນຸດຕັດສິນພາລະກິດໃນປັດຈຸບັນຂອງພຣະເຈົ້າດ້ວຍພາລະກິດທີ່ພຣະອົງປະຕິບັດໃນອະດີດໂດຍບໍ່ປ່ຽນແປງ, ມັນຈຶ່ງຍາກຫຼາຍທີ່ພຣະເຈົ້າຈະດຳເນີນແຕ່ລະຂັ້ນຕອນຂອງພາລະກິດແຫ່ງຍຸກໃໝ່. ມະນຸດສ້າງມີຄວາມຫຍຸ້ງຍາກຫຼາຍເກີນໄປ! ເຂົາມີການຄິດທີ່ມີຂອບເຂດຫຼາຍເກີນໄປ! ບໍ່ມີໃຜຮູ້ຈັກພາລະກິດຂອງພຣະເຈົ້າ ແຕ່ທຸກຄົນຈຳກັດພາລະກິດດັ່ງກ່າວ. ເມື່ອເຂົາອອກຈາກພຣະເຈົ້າ ມະນຸດກໍສູນເສຍຊີວິດ, ຄວາມຈິງ ແລະ ພອນຂອງພຣະເຈົ້າ, ແຕ່ມະນຸດກໍບໍ່ຍອມຮັບຊີວິດ ຫຼື ຄວາມຈິງເລີຍ, ແຮງໄກທີ່ຈະໄດ້ຮັບພອນອັນຍິ່ງໃຫຍ່ກວ່າທີ່ພຣະເຈົ້າໄດ້ປະທານໃຫ້ແກ່ມະນຸດຊາດ. ມະນຸດທຸກຄົນຫວັງຈະໄດ້ຮັບພຣະເຈົ້າ ແຕ່ບໍ່ສາມາດອົດທົນຕໍ່ການປ່ຽນແປງຕ່າງໆໃນພາລະກິດຂອງພຣະເຈົ້າ. ຜູ້ຄົນທີ່ບໍ່ຍອມຮັບພາລະກິດໃໝ່ຂອງພຣະເຈົ້າ ເຊື່ອວ່າ ພາລະກິດຂອງພຣະເຈົ້າບໍ່ມີການປ່ຽນແປງ, ພາລະກິດຂອງພຣະເຈົ້າຍັງຄົງຢຸດຢູ່ບ່ອນເກົ່າຕະຫຼອດໄປ. ໃນຄວາມເຊື່ອຂອງພວກເຂົາ ທຸກສິ່ງທີ່ຈຳເປັນເພື່ອຮັບເອົາຄວາມລອດພົ້ນຕະຫຼອດໄປເປັນນິດຈາກພຣະເຈົ້າແມ່ນເພື່ອປະຕິບັດຕາມກົດເກນ ແລະ ຕາບໃດທີ່ພວກເຂົາກັບໃຈ ແລະ ສາລະພາບຄວາມຜິດບາບຂອງພວກເຂົາ ຄວາມປະສົງຂອງພຣະເຈົ້າກໍຈະເປັນທີ່ພໍໃຈຢູ່ສະເໝີ. ພວກເຂົາມີຄວາມຄິດເຫັນວ່າພຣະເຈົ້າສາມາດເປັນພຽງພຣະເຈົ້າທີ່ຢູ່ພາຍໃຕ້ກົດບັນຍັດ ແລະ ພຣະເຈົ້າທີ່ຖືກຄຶງເທິງໄມ້ກາງແຂນເພື່ອມະນຸດ; ມັນແມ່ນຄວາມຄິດເຫັນຂອງພວກເຂົາເຊັ່ນທີ່ຄິດວ່າ ພຣະເຈົ້າບໍ່ຄວນ ແລະ ບໍ່ສາມາດເໜືອກວ່າພຣະຄຳພີໄດ້. ມັນເປັນຍ້ອນຄວາມຄິດເຫັນເຫຼົ່ານີ້ທີ່ເປັນໂສ້ມັດພວກເຂົາຢ່າງແໜ້ນຕິດຢູ່ກັບກົດບັນຍັດແຫ່ງຍຸກເດີມ ແລະ ຄຶງພວກເຂົາໃສ່ກົດລະບຽບທີ່ຕາຍ. ເຖິງກັບມີຄົນທີ່ເຊື່ອອີກວ່າພາລະກິດໃໝ່ຂອງພຣະເຈົ້າອາດເປັນແນວໃດກໍຕາມ ມັນຕ້ອງຖືກສະໜັບສະໜູນໂດຍຄຳທຳນາຍ ແລະ ໃນແຕ່ລະຂັ້ນຕອນຂອງພາລະກິດດັ່ງກ່າວ ທຸກຄົນທີ່ຕິດຕາມພຣະອົງດ້ວຍຫົວໃຈທີ່ “ແທ້ຈິງ”

ຕ້ອງໄດ້ຮັບການເປີດເຜີຍ; ຖ້າບໍ່ດັ່ງນັ້ນ ພາລະກິດດັ່ງກ່າວກໍບໍ່ສາມາດເປັນຂອງພຣະເຈົ້າໄດ້. ມັນບໍ່ແມ່ນເລື່ອງງ່າຍທີ່ຈະໃຫ້ມະນຸດມາຮູ້ຈັກກັບພຣະເຈົ້າ. ນອກຈາກຫົວໃຈທີ່ໂງ່ຈ້າຂອງມະນຸດ ແລະ ທຳມະຊາດແຫ່ງການກະບົດທີ່ໃຫ້ຄວາມສຳຄັນກັບຕົນເອງ ແລະ ຄວາມທະນົງຕົນ, ມັນຍິ່ງຍາກຫຼາຍຂຶ້ນສຳລັບເຂົາທີ່ຈະຍອມຮັບເອົາພາລະກິດໃໝ່ຂອງພຣະເຈົ້າ. ມະນຸດບໍ່ກວດສອບພາລະກິດໃໝ່ຂອງພຣະເຈົ້າຢ່າງລະມັດລະວັງ ຫຼື ບໍ່ຍອມຮັບມັນດ້ວຍຄວາມອ່ອນນ້ອມຖ່ອມຕົນ; ກົງກັນຂ້າມ ເຂົານຳໃຊ້ທ່າທີທີ່ດູຖູກ ໃນຂະນະທີ່ເຂົາລໍຖ້າການເປີດເຜີຍ ແລະ ການຊີ້ນຳຂອງພຣະເຈົ້າ. ນີ້ບໍ່ແມ່ນການປະພຶດຂອງຄົນທີ່ກະບົດ ແລະ ຕໍ່ຕ້ານພຣະເຈົ້າບໍ? ມະນຸດປະເພດນີ້ຈະສາມາດຮັບການເຫັນພ້ອມຈາກພຣະເຈົ້າໄດ້ແນວໃດ?

ພຣະເຢຊູໄດ້ກ່າວວ່າ ພາລະກິດຂອງພຣະເຢໂຮວາໄດ້ລ້າຊ້າໃນຍຸກແຫ່ງພຣະຄຸນ ດັ່ງທີ່ເຮົາເວົ້າໃນມື້ນີ້ວ່າ ພາລະກິດຂອງພຣະເຢຊູລ້າຊ້າເຊັ່ນກັນ. ຖ້າມີພຽງຍຸກແຫ່ງພຣະບັນຍັດ ແລະ ບໍ່ມີຍຸກແຫ່ງພຣະຄຸນ, ແລ້ວພຣະເຢຊູກໍບໍ່ສາມາດຖືກຄຶງທີ່ໄມ້ກາງແຂນ ແລະ ບໍ່ສາມາດໄຖ່ມະນຸດຊາດທຸກຄົນໄດ້. ຖ້າມີພຽງຍຸກແຫ່ງພຣະບັນຍັດ ມະນຸດຈະສາມາດມາຮອດທຸກມື້ນີ້ບໍ? ປະຫວັດສາດກ້າວໄປຂ້າງໜ້າ ແລະ ປະຫວັດສາດບໍ່ແມ່ນກົດເກນທຳມະຊາດແຫ່ງພາລະກິດຂອງພຣະເຈົ້າບໍ? ນີ້ບໍ່ແມ່ນສະແດງເຖິງການຄຸ້ມຄອງມະນຸດພາຍໃນຈັກກະວານທັງໝົດຂອງພຣະອົງບໍ? ປະຫວັດສາດກໍ່ຄືບໜ້າໄປເລື້ອຍໆ ແລະ ດ້ວຍເຫດນັ້ນ ພາລະກິດຂອງພຣະເຈົ້າກໍເຊັ່ນກັນ. ຄວາມປະສົງຂອງພຣະເຈົ້າປ່ຽນແປງຕະຫຼອດເວລາ. ພຣະອົງບໍ່ສາມາດຢູ່ໃນຂັ້ນຕອນດຽວຂອງພາລະກິດເປັນເວລາຫົກພັນປີໄດ້, ຍ້ອນທຸກຄົນຮູ້ຈັກວ່າ ພຣະອົງໃໝ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ ແລະ ພຣະອົງບໍ່ສາມາດສືບຕໍ່ດຳເນີນພາລະກິດ ເຊັ່ນ: ຖືກຄຶງທີ່ໄມ້ກາງແຂນ, ຖືກຕອກດ້ວຍຕະປູໃສ່ໄມ້ກາງແຂນໜຶ່ງຄັ້ງ, ສອງຄັ້ງ ແລະ ສາມຄັ້ງ... ມັນເປັນຕາຫົວຫຼາຍທີ່ຄິດແບບນັ້ນ. ພຣະເຈົ້າບໍ່ສືບຕໍ່ເຮັດພາລະກິດເດີມ; ພາລະກິດຂອງພຣະອົງປ່ຽນແປງເລື້ອຍໆ ແລະ ໃໝ່ຕະຫຼອດເວລາ. ຫຼາຍສໍ່າກັບທີ່ເຮົາກ່າວພຣະທຳໃໝ່ກັບພວກເຈົ້າ ແລະ ປະຕິບັດພາລະກິດໃໝ່ໃນແຕ່ລະມື້. ນີ້ຄືພາລະກິດທີ່ເຮົາປະຕິບັດ ແລະ ສິ່ງທີ່ເປັນກະແຈແມ່ນຄຳວ່າ "ໃໝ່" ແລະ "ອັດສະຈັນ". "ພຣະເຈົ້າບໍ່ເຄີຍປ່ຽນແປງ ແລະ ພຣະເຈົ້າຈະເປັນພຣະເຈົ້າຢູ່ສະເໝີ": ຖ້ອຍຄຳນີ້ເປັນຄວາມຈິງສະເໝີ; ທາດແທ້ຂອງພຣະເຈົ້າບໍ່ເຄີຍປ່ຽນແປງ, ພຣະເຈົ້າກໍເປັນພຣະເຈົ້າຢູ່ສະເໝີ ແລະ ພຣະອົງບໍ່ສາມາດກາຍມາເປັນຊາຕານໄດ້ຈັກເທື່ອ, ແຕ່ສິ່ງນີ້ບໍ່ໄດ້ພິສູດວ່າ ພາລະກິດຂອງພຣະອົງນັ້ນໝັ້ນຄົງ ແລະ ບໍ່ປ່ຽນແປງຄືກັບທາດແທ້ຂອງພຣະອົງ. ເຈົ້າປະກາດວ່າ ພຣະເຈົ້າບໍ່ສາມາດປ່ຽນແປງ, ແຕ່ແລ້ວເຈົ້າຈະສາມາດອະທິບາຍໄດ້ແນວໃດວ່າ ພຣະເຈົ້າໃໝ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ? ພາລະກິດຂອງພຣະເຈົ້າຂະຫຍາຍຢ່າງຕໍ່ເນື່ອງ ແລະ ປ່ຽນແປງຢູ່ເປັນປະຈຳ ແລະ ຄວາມປະສົງຂອງພຣະອົງກໍຖືກເປີດເຜີຍ ແລະ ເຮັດໃຫ້ມະນຸດຮູ້ຈັກຢ່າງຕໍ່ເນື່ອງ. ເມື່ອມະນຸດມີປະສົບການກັບພາລະກິດຂອງພຣະເຈົ້າ, ອຸປະນິໄສຂອງເຂົາກໍປ່ຽນແປງໂດຍບໍ່ຢຸດຢັ້ງ ເຊັ່ນດຽວກັບຄວາມຮູ້ຂອງເຂົາ. ດ້ວຍເຫດນັ້ນ ການປ່ຽນແປງນີ້ເກີດຂຶ້ນຈາກບ່ອນໃດ? ມັນບໍ່ແມ່ນຈາກພາລະກິດທີ່ມີການປ່ຽນແປງຕະຫຼອດຂອງພຣະເຈົ້າບໍ? ຖ້າອຸປະນິໄສຂອງມະນຸດສາມາດປ່ຽນແປງໄດ້, ເປັນຫຍັງມະນຸດບໍ່ສາມາດຍອມໃຫ້ພາລະກິດຂອງ

ເຮົາ ແລະ ພຣະທຳຂອງເຮົາປ່ຽນແປງຢ່າງຕໍ່ເນື່ອງໄດ້ເຊັ່ນກັນ? ເຮົາຕ້ອງເຮັດຕາມຂໍ້ຈຳກັດຂອງມະນຸດບໍ? ໃນສິ່ງນີ້ ເຈົ້າບໍ່ໄດ້ກຳລັງບັງຄັບໃຊ້ການໂຕ້ແຍ້ງ ແລະ ເຫດຜົນທີ່ອອກນອກຮູ້ນອກທາງບໍ?

ຫຼັງຈາກການຟື້ນຄືນຂອງພຣະອົງ ພຣະເຢຊູປາກົດຕໍ່ໜ້າສາວົກ ແລະ ກ່າວວ່າ, "ເຮົານຳເອົາສັນຍາຂອງພຣະບິດາຂອງເຮົາມາສູ່ພວກເຈົ້າ ແຕ່ພວກເຈົ້າຈົ່ງລໍຖ້າຢູ່ໃນເມືອງເຢລູຊາເລັມ ຈົນກວ່າພວກເຈົ້າຈະໄດ້ຮັບສິດອຳນາດທີ່ມາຈາກເບື້ອງເທິງ". ເຈົ້າຮູ້ບໍວ່າ ພຣະທຳເຫຼົ່ານີ້ສາມາດອະທິບາຍແນວໃດ? ດຽວນີ້ ເຈົ້າເຕັມໄປດ້ວຍສິດອຳນາດຂອງພຣະອົງບໍ? ເຈົ້າເຂົ້າໃຈບໍວ່າ "ສິດອຳນາດ" ໝາຍເຖິງຫຍັງ? ພຣະເຢຊູປະກາດວ່າ ພຣະວິນຍານແຫ່ງຄວາມຈິງຈະຖືກປະທານໃຫ້ກັບມະນຸດໃນຍຸກສຸດທ້າຍ. ໃນຕອນນີ້ ຍຸກສຸດທ້າຍຢູ່ທີ່ນີ້ແລ້ວ; ເຈົ້າເຂົ້າໃຈວິທີທີ່ພຣະວິນຍານແຫ່ງຄວາມຈິງປະກາດພຣະທຳບໍ? ພຣະວິນຍານແຫ່ງຄວາມຈິງປາກົດຂຶ້ນ ແລະ ປະຕິບັດພາລະກິດຢູ່ໃສ? ໃນໜັງສືແຫ່ງຄຳທຳນາຍຂອງຜູ້ປະກາດພຣະທຳເອຊາຢາ, ບໍ່ເຄີຍກ່າວເຖິງເດັກນ້ອຍທີ່ມີນາມວ່າ ເຢຊູ ຈະກຳເນີດໃນຍຸກແຫ່ງພັນທະສັນຍາໃໝ່; ມັນພຽງແຕ່ຖືກຂຽນໄວ້ວ່າເດັກນ້ອຍຜູ້ຊາຍທີ່ຊື່ ເອມານູເອັນຈະເກີດ. ເປັນຫຍັງຈຶ່ງບໍ່ມີກ່າວເຖິງຊື່ "ເຢຊູ"? ບໍ່ມີຊື່ນີ້ປາກົດຢູ່ໃນໜັງສືພັນທະສັນຍາເດີມເລີຍ, ສະນັ້ນເປັນຫຍັງເຈົ້າຈຶ່ງຍັງເຊື່ອໃນພຣະເຢຊູ? ແນ່ນອນ ເຈົ້າບໍ່ໄດ້ພຽງເລີ່ມເຊື່ອໃນພຣະເຢຊູ ຫຼັງຈາກທີ່ເຫັນພຣະອົງດ້ວຍຕາຂອງເຈົ້າ ແມ່ນບໍ? ຫຼື ເຈົ້າເລີ່ມເຊື່ອຫຼັງຈາກໄດ້ຮັບການເປີດເຜີຍບໍ? ພຣະເຈົ້າຈະສຳແດງພຣະຄຸນດັ່ງກ່າວຢ່າງແທ້ຈິງບໍ? ພຣະອົງປະທານພອນອັນຍິ່ງໃຫຍ່ໃຫ້ກັບເຈົ້າບໍ? ແມ່ນຫຍັງຄືພື້ນຖານແຫ່ງຄວາມເຊື່ອຂອງເຈົ້າໃນພຣະເຢຊູ? ເປັນຫຍັງເຈົ້າບໍ່ເຊື່ອວ່າ ພຣະເຈົ້າທີ່ກາຍມາເປັນເນື້ອໜັງໃນມື້ນີ້? ເປັນຫຍັງເຈົ້າຈຶ່ງເວົ້າວ່າ ການຂາດຄວາມເປີດເຜີຍຈາກພຣະເຈົ້າພິສູດໃຫ້ເຫັນວ່າພຣະອົງບໍ່ໄດ້ກາຍມາເປັນເນື້ອໜັງ? ພຣະອົງຕ້ອງແຈ້ງໃຫ້ແກ່ມະນຸດຮູ້ກ່ອນເລີ່ມຕົ້ນພາລະກິດຂອງພຣະອົງບໍ? ພຣະອົງຕ້ອງຮັບການເຫັນດີຈາກພວກເຂົາກ່ອນບໍ? ເອຊາຢາພຽງແຕ່ປະກາດວ່າ ເດັກນ້ອຍຜູ້ຊາຍຈະກຳເນີດໃນຮາງຫຍ້າ; ເພິ່ນບໍ່ເຄີຍທຳນາຍວ່າ ມາຣີອາຈະໃຫ້ກຳເນີດກັບພຣະເຢຊູ. ເຈົ້າອີງຄວາມເຊື່ອຂອງເຈົ້າທີ່ວ່າພຣະເຢຊູເກີດຈາກມາຣີອານັ້ນ ໃສ່ຫຍັງແທ້ໆ? ແນ່ນອນ ຄວາມເຊື່ອຂອງເຈົ້າບໍ່ໄດ້ສັບສົນບໍ? ບາງຄົນເວົ້າວ່າ ນາມຂອງພຣະເຈົ້າບໍ່ປ່ຽນແປງ. ແລ້ວເປັນຫຍັງຊື່ ເຢໂຮວາ ຈຶ່ງກາຍມາເປັນເຢຊູ? ມີການທຳນາຍວ່າພຣະເມຊີອາຈະມາ, ແລ້ວເປັນຫຍັງຈຶ່ງມີມະນຸດທີ່ມີຊື່ວ່າ ເຢຊູມາແທນ? ເປັນຫຍັງຊື່ຂອງພຣະເຈົ້າຈຶ່ງປ່ຽນແປງ? ພາລະກິດດັ່ງກ່າວບໍ່ໄດ້ຖືກປະຕິບັດແຕ່ດົນນານມາແລ້ວບໍ? ໃນມື້ນີ້ ພຣະເຈົ້າບໍ່ໄດ້ດຳເນີນພາລະກິດໃໝ່ບໍ? ພາລະກິດຂອງມື້ວານສາມາດປ່ຽນແປງໄດ້ ແລະ ພາລະກິດຂອງພຣະເຢຊູສາມາດສືບຕໍ່ຈາກພາລະກິດຂອງພຣະເຢໂຮວາໄດ້. ແລ້ວພາລະກິດຂອງພຣະເຢຊູບໍ່ສາມາດຖືກສືບຕໍ່ໂດຍພາລະກິດອື່ນບໍ? ຖ້າຊື່ພຣະເຢໂຮວາສາມາດປ່ຽນເປັນ ພຣະເຢຊູ, ແລ້ວ ຊື່ພຣະເຢຊູບໍ່ສາມາດປ່ຽນແປງບໍ? ບໍ່ມີຫຍັງໃນສິ່ງນີ້ທີ່ຜິດປົກກະຕິ; ມັນເປັນພຽງຍ້ອນຜູ້ຄົນມັກງ່າຍເກີນໄປ. ພຣະເຈົ້າຈະເປັນພຣະເຈົ້າຢູ່ສະເໝີ. ບໍ່ວ່າພາລະກິດຂອງພຣະອົງຈະປ່ຽນແປງ ແລະ ບໍ່ວ່າຊື່ຂອງພຣະອົງອາດປ່ຽນແປງ, ອຸປະນິໄສ ແລະ ສະຕິປັນຍາຂອງພຣະອົງຈະບໍ່ປ່ຽນແປງຈັກເທື່ອ. ຖ້າເຈົ້າເຊື່ອວ່າ ພຣະເຈົ້າສາມາດພຽງແຕ່ຖືກເອີ້ນໃນນາມ ເຢຊູ, ແລ້ວຄວາມຮູ້ຂອງເຈົ້າກໍມີໜ້ອຍ

ເກີນໄປ. ເຈົ້າກ້າຢືນຢັນບໍວ່າ ເຢຊູຈະເປັນຊື່ຂອງພຣະເຈົ້າຕະຫຼອດໄປ, ພຣະເຈົ້າຈະໃຊ້ຊື່ເຢຊູຕະຫຼອດໄປ ແລະ ຢູ່ສະເໝີ ແລະ ຊື່ນີ້ຈະບໍ່ປ່ຽນແປງ? ເຈົ້າກ້າຢືນຢັນຢ່າງໝັ້ນໃຈບໍວ່າ ມັນແມ່ນຊື່ເຢຊູ ທີ່ສິ້ນສຸດຍຸກແຫ່ງພຣະບັນຍັດ ແລະ ຍັງຈະສິ້ນສຸດຍຸກສຸດທ້າຍເຊັ່ນດຽວກັນ? ໃຜສາມາດເວົ້າໄດ້ວ່າ ພຣະຄຸນຂອງພຣະເຢຊູສາມາດນຳຍຸກດັ່ງກ່າວມາເຖິງຈຸດສິ້ນສຸດ? ຖ້າເຈົ້າຂາດຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບຄວາມຈິງເຫຼົ່ານີ້, ແລ້ວເຈົ້າຈະບໍ່ພຽງແຕ່ເຈົ້າຈະບໍ່ສາມາດປະກາດຂ່າວປະເສີດໄດ້, ແຕ່ເຈົ້າເອງຈະບໍ່ສາມາດຍຶດໝັ້ນໄດ້. ເມື່ອຮອດມື້ທີ່ເຈົ້າແກ້ໄຂຄວາມຍາກລຳບາກຂອງຜູ້ຄົນທີ່ເຄັ່ງສາດສະໜາ ແລະ ໂຕ້ແຍ້ງຄວາມເຊື່ອທີ່ຜິດຂອງພວກເຂົາທັງໝົດ, ນັ້ນຈະເປັນເຄື່ອງພິສູດວ່າ ເຈົ້າແນ່ໃຈໃນຂັ້ນຕອນນີ້ຂອງພາລະກິດ ແລະ ບໍ່ມີຄວາມສົງໄສແມ່ນແຕ່ໜ້ອຍດຽວເລີຍ. ຖ້າເຈົ້າບໍ່ສາມາດໂຕ້ແຍ້ງຄວາມເຊື່ອທີ່ຜິດຂອງພວກເຂົາ, ແລ້ວພວກເຂົາກໍຈະໃສ່ຮ້າຍປ້າຍສີເຈົ້າ ແລະ ກ່າວຫາເຈົ້າ. ນັ້ນຈະບໍ່ແມ່ນເລື່ອງທີ່ເປັນຕາອັບອາຍບໍ?

ຊາວຢິວທຸກຄົນອ່ານພັນທະສັນຍາເດີມ ແລະ ຮູ້ຈັກເຖິງການທຳນາຍຂອງເອຊາຢາວ່າ ເດັກນ້ອຍຜູ້ຊາຍຈະກຳເນີດໃນຮາງຫຍ້າ. ແລ້ວເປັນຫຍັງພວກເຂົາຈຶ່ງຂົ່ມເຫັງພຣະເຢຊູທັງທີ່ພວກເຂົາກໍຮູ້ເຖິງຄຳທຳນາຍນີ້ຢ່າງສົມບູນ? ນີ້ບໍ່ແມ່ນທຳມະຊາດທີ່ກະບົດຂອງພວກເຂົາ ແລະ ເປັນການຂາດຄວາມຮູ້ໃນພາລະກິດຂອງພຣະວິນຍານບໍລິສຸດບໍ? ໃນເວລານັ້ນ, ພວກຟາຣີຊາຍເຊື່ອວ່າ ພາລະກິດຂອງພຣະເຢຊູແຕກຕ່າງຈາກສິ່ງທີ່ພວກເຂົາຮູ້ກ່ຽວກັບເດັກນ້ອຍຜູ້ຊາຍທີ່ຖືກທຳນາຍໄວ້ ແລະ ຜູ້ຄົນໃນປັດຈຸບັນປະຕິເສດພຣະເຈົ້າ ຍ້ອນພາລະກິດຂອງພຣະເຈົ້າຜູ້ທີ່ບັງເກີດເປັນມະນຸດບໍ່ສອດຄ່ອງກັບພຣະຄຳພີ. ແກ່ນແທ້ຂອງການກະບົດຂອງພວກເຂົາທີ່ມີຕໍ່ພຣະເຈົ້າອົງນີ້ບໍ່ແມ່ນສິ່ງດຽວກັນບໍ? ເຈົ້າສາມາດຍອມຮັບພາລະກິດທັງໝົດຂອງພຣະວິນຍານບໍລິສຸດໄດ້ໂດຍບໍ່ມີຂໍ້ຄຳຖາມບໍ? ຖ້າມັນແມ່ນພາລະກິດຂອງພຣະວິນຍານບໍລິສຸດ ແລ້ວມັນກໍເປັນກະແສທີ່ຖືກຕ້ອງ ແລະ ເຈົ້າຄວນຍອມຮັບມັນ ໂດຍບໍ່ຕ້ອງສົງໄສໃດໆ; ເຈົ້າບໍ່ຄວນຊອກຫາ ແລະ ເລືອກສິ່ງທີ່ຈະຍອມຮັບ. ຖ້າເຈົ້າບໍ່ໄດ້ຮັບຄວາມເຂົ້າໃຈເພີ່ມຂຶ້ນກ່ຽວກັບພຣະເຈົ້າ ແລະ ໃຊ້ຄວາມລະມັດລະວັງຫຼາຍຂຶ້ນຕໍ່ພຣະອົງ, ແລ້ວສິ່ງນີ້ບໍ່ໄດ້ເປັນສິ່ງທີ່ບໍ່ໄດ້ຖືກຮຽກຮ້ອງບໍ? ເຈົ້າບໍ່ຕ້ອງຄົ້ນຫາເພີ່ມເຕີມສຳລັບການຢືນຢັນຈາກພຣະຄຳພີ; ຖ້າມັນຄືພາລະກິດຂອງພຣະວິນຍານບໍລິສຸດ, ແລ້ວເຈົ້າກໍຕ້ອງຍອມຮັບມັນ, ຍ້ອນເຈົ້າເຊື່ອໃນພຣະເຈົ້າເພື່ອຕິດຕາມພຣະເຈົ້າ ແລະ ເຈົ້າບໍ່ຄວນສືບຄົ້ນພຣະອົງ. ເຈົ້າບໍ່ຄວນສະແຫວງຫາຫຼັກຖານເພີ່ມເຕີມກ່ຽວກັບເຮົາເພື່ອພິສູດວ່າເຮົາເປັນພຣະເຈົ້າຂອງເຈົ້າ, ແຕ່ເຈົ້າຄວນແຍກແຍະວ່າ ເຮົາມີປະໂຫຍດສຳລັບເຈົ້າ ຫຼື ບໍ, ນີ້ແມ່ນສິ່ງທີ່ສຳຄັນທີ່ສຸດ. ເຖິງແມ່ນວ່າເຈົ້າຄົ້ນພົບຫຼັກຖານຫຼາຍຢ່າງທີ່ບໍ່ສາມາດໂຕ້ແຍ້ງໄດ້ພາຍໃນພຣະຄຳພີ, ມັນກໍບໍ່ສາມາດເຮັດໃຫ້ເຈົ້າຢືນຢູ່ຕໍ່ໜ້າເຮົາຢ່າງສົມບູນໄດ້. ເຈົ້າພຽງແຕ່ອາໄສຢູ່ໃນຂອບເຂດຈຳກັດຂອງພຣະຄຳພີ ແລະ ບໍ່ແມ່ນຕໍ່ໜ້າເຮົາ; ພຣະຄຳພີບໍ່ສາມາດຊ່ວຍໃຫ້ເຈົ້າຮູ້ຈັກເຮົາ ຫຼື ມັນບໍ່ສາມາດເຮັດໃຫ້ຄວາມຮັກທີ່ເຈົ້າມີຕໍ່ເຮົາເລິກເຊິ່ງຂຶ້ນ. ເຖິງພຣະຄຳພີໄດ້ທຳນາຍໄວ້ວ່າ ເດັກນ້ອຍຜູ້ຊາຍຈະກຳເນີດ, ບໍ່ມີໃຜສາມາດຢັ່ງເຖິງໄດ້ວ່າ ຄຳທຳນາຍນັ້ນໄດ້ກ່າວເຖິງໃຜ, ຍ້ອນມະນຸດບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ ແລະ ນີ້ຄືສິ່ງທີ່ເຮັດໃຫ້ພວກຟາຣີຊາຍລຸກຂຶ້ນຕໍ່ຕ້ານພຣະເຢຊູ. ບາງຄົນຮູ້ວ່າ ພາລະກິດ

ຂອງເຮົາແມ່ນຢູ່ໃນຜົນປະໂຫຍດຂອງມະນຸດ, ແຕ່ພວກເຂົາສືບຕໍ່ເຊື່ອວ່າ ພຣະເຢຊູ ແລະ ເຮົາເປັນສອງຢ່າງທີ່ຕ່າງກັນທັງໝົດ, ເປັນສິ່ງທີ່ບໍ່ສາມາດເຂົ້າກັນໄດ້. ໃນເວລານັ້ນ ພຣະເຢຊູພຽງແຕ່ກ່າວຄຳເທດສະໜາເປັນຊຸດຕໍ່ສາວົກຂອງພຣະອົງໃນຍຸກແຫ່ງພຣະຄຸນ ກ່ຽວກັບຫົວຂໍ້ຕ່າງໆ ເຊັ່ນ: ວິທີການປະຕິບັດ, ວິທີການເຕົ້າໂຮມກັນ, ວິທີການອ້ອນວອນອະທິຖານ, ວິທີການປະຕິບັດຕໍ່ຄົນອື່ນ ແລະ ອື່ນໆອີກ. ພາລະກິດທີ່ພຣະອົງປະຕິບັດແມ່ນເປັນຂອງຍຸກແຫ່ງພຣະຄຸນ ແລະ ພຣະອົງພຽງອະທິບາຍຢ່າງລະອຽດເຖິງວິທີທີ່ສາວົກ ແລະ ຜູ້ຄົນເຫຼົ່ານັ້ນທີ່ຕິດຕາມພຣະອົງຄວນປະຕິບັດ. ພຣະອົງປະຕິບັດພຽງພາລະກິດໃນຍຸກແຫ່ງພຣະຄຸນ ແລະ ບໍ່ໄດ້ປະຕິບັດພາລະກິດແຫ່ງຍຸກສຸດທ້າຍ. ເມື່ອພຣະເຢໂຮວາບັນທຶກພຣະບັນຍັດລົງໃນພັນທະສັນຍາເດີມໃນຍຸກແຫ່ງພຣະບັນຍັດ ເປັນຫຍັງພຣະອົງຈຶ່ງບໍ່ດຳເນີນພາລະກິດຂອງຍຸກແຫ່ງພຣະຄຸນ? ເປັນຫຍັງພຣະອົງຈຶ່ງບໍ່ເຮັດໃຫ້ຊັດເຈນລ່ວງໜ້າກ່ຽວກັບພາລະກິດຂອງຍຸກແຫ່ງພຣະຄຸນ? ສິ່ງນີ້ຈະບໍ່ຊ່ວຍໃຫ້ມະນຸດຍອມຮັບພາລະກິດນັ້ນບໍ? ພຣະອົງພຽງແຕ່ທຳນາຍວ່າເດັກນ້ອຍຜູ້ຊາຍຈະກຳເນີດ ແລະ ມີອຳນາດ, ແຕ່ພຣະອົງບໍ່ໄດ້ປະຕິບັດພາລະກິດຂອງຍຸກແຫ່ງພຣະຄຸນໄວ້ລ່ວງໜ້າເລີຍ. ພາລະກິດຂອງພຣະເຈົ້າໃນແຕ່ລະຍຸກມີຂອບເຂດທີ່ຊັດເຈນ; ພຣະອົງພຽງປະຕິບັດພາລະກິດຂອງຍຸກປັດຈຸບັນ ແລະ ບໍ່ປະຕິບັດໃນຂັ້ນຕອນຖັດໄປຂອງພາລະກິດໃດໄວ້ລ່ວງໜ້າ. ມີພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ, ພາລະກິດຕົວແທນຂອງພຣະອົງໃນແຕ່ລະຍຸກຈຶ່ງຈະຖືກນຳມາໄວ້ຢູ່ທາງໜ້າ. ພຣະເຢຊູໄດ້ກ່າວເຖິງສັນຍານກ່ຽວກັບຍຸກສຸດທ້າຍ, ເຖິງວິທີການອົດທົນ ແລະ ການຮັບເອົາຄວາມລອດພົ້ນ, ການກັບໃຈ ແລະ ສາລະພາບຄວາມຜິດ ແລະ ການແບກໄມ້ກາງແຂນ ແລະ ອົດທົນຕໍ່ການທົນທຸກທໍລະມານ; ພຣະອົງບໍ່ເຄີຍກ່າວເຖິງວິທີທີ່ມະນຸດໃນຍຸກສຸດທ້າຍຄວນເຂົ້າຫາ ຫຼື ວິທີທີ່ເຂົາຄວນສະແຫວງຫາເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າ. ເມື່ອເປັນດັ່ງນັ້ນ ມັນຈະບໍ່ເປັນຕາຫົວບໍທີ່ຈະຄົ້ນຫາພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍໃນພຣະຄຳພີ? ເຈົ້າສາມາດເບິ່ງຫຍັງໄດ້ ໂດຍການຍຶດຖືພຣະຄຳພີໄວ້ເທົ່ານັ້ນ? ບໍ່ວ່າຈະເປັນນັກແປຄວາມໝາຍພຣະຄຳພີ ຫຼື ນັກເທດສະໜາ ມີໃຜແດ່ທີ່ສາມາດທຳນາຍພາລະກິດຂອງປັດຈຸບັນໄດ້ລ່ວງໜ້າ?

"ຄົນໃດມີຫູ ຄົນນັ້ນຈົ່ງຟັງສິ່ງທີ່ພຣະວິນຍານກ່າວຕໍ່ຄຣິສຕະຈັກ". ບັດນີ້ ພວກເຈົ້າໄດ້ຍິນພຣະທຳຂອງພຣະວິນຍານບໍລິສຸດແລ້ວບໍ? ພຣະທຳຂອງພຣະເຈົ້າໄດ້ມາເຖິງພວກເຈົ້າແລ້ວ. ພວກເຈົ້າໄດ້ຍິນພຣະທຳເຫຼົ່ານັ້ນບໍ? ພຣະເຈົ້າດຳເນີນພາລະກິດແຫ່ງພຣະທຳໃນຍຸກສຸດທ້າຍ ແລະ ພຣະທຳດັ່ງກ່າວແມ່ນມາຈາກພຣະວິນຍານບໍລິສຸດ, ເພາະວ່າພຣະເຈົ້າຄືພຣະວິນຍານບໍລິສຸດ ແລະ ຍັງສາມາດເປັນເນື້ອໜັງອີກ; ສະນັ້ນ ພຣະທຳຂອງພຣະວິນຍານບໍລິສຸດທີ່ໄດ້ກ່າວໄວ້ໃນອະດີດຜ່ານມາ ກໍຄືພຣະທຳຂອງພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນ. ມີຄົນໂງ່ຈ້າຫຼາຍຄົນເຊື່ອວ່າ ຍ້ອນແມ່ນພຣະວິນຍານບໍລິສຸດທີ່ກຳລັງເວົ້າ, ສຽງຂອງພຣະອົງຄວນກ່າວມາຈາກສະຫວັນເພື່ອໃຫ້ຜູ້ຄົນໄດ້ຍິນ. ຄົນໃດກໍຕາມທີ່ຄິດແບບນີ້ບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ. ໃນຄວາມເປັນຈິງ ພຣະຄຳທີ່ພຣະວິນຍານບໍລິສຸດກ່າວແມ່ນຄຳທີ່ກ່າວໂດຍພຣະເຈົ້າຜູ້ບັງເກີດເປັນເນື້ອໜັງ. ພຣະວິນຍານບໍລິສຸດບໍ່ສາມາດກ່າວກັບມະນຸດໂດຍກົງ; ແມ່ນແຕ່ໃນຍຸກແຫ່ງພຣະບັນຍັດ, ພຣະເຢໂຮວາກໍບໍ່ກ່າວກັບຜູ້ຄົນໂດຍກົງ. ມັນແຮງຈະບໍ່

ໄດ້ເປັນໄດ້ໜ້ອຍກວ່າເກົ່າບໍທີ່ພຣະອົງຈະກ່າວໃນຍຸກປັດຈຸບັນບໍ? ເພື່ອທີ່ພຣະເຈົ້າຈະກ່າວພຣະຄຳເພື່ອດຳເນີນພາລະກິດ, ພຣະອົງຕ້ອງກາຍເປັນເນື້ອໜັງ; ບໍ່ດັ່ງນັ້ນ ພາລະກິດຂອງພຣະອົງກໍຈະບໍ່ສາມາດບັນລຸເປົ້າໝາຍໄດ້. ຄົນທີ່ປະຕິເສດພຣະເຈົ້າທີ່ບັງເກີດເປັນມະນຸດ ແມ່ນຄົນທີ່ບໍ່ຮູ້ຈັກພຣະວິນຍານ ຫຼື ຫຼັກການທີ່ພຣະເຈົ້າປະຕິບັດພາລະກິດ. ຜູ້ທີ່ເຊື່ອວ່າ ປັດຈຸບັນນີ້ຄືຍຸກແຫ່ງພຣະວິນຍານບໍລິສຸດ ແຕ່ບໍ່ຍອມຮັບພາລະກິດໃໝ່ຂອງພຣະອົງ ແມ່ນຄົນທີ່ອາໄສຢູ່ໃນຄວາມເຊື່ອທີ່ເລື່ອນລອຍ ແລະ ບໍ່ມີຕົວຕົນ. ຜູ້ຄົນປະເພດດັ່ງກ່າວຈະບໍ່ໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ. ຜູ້ຄົນທີ່ພຽງແຕ່ຫວັງໃຫ້ພຣະວິນຍານບໍລິສຸດກ່າວ ແລະ ປະຕິບັດພາລະກິດຂອງພຣະອົງໂດຍກົງ ແລະ ບໍ່ຍອມຮັບເອົາພຣະທຳ ຫຼື ພາລະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດຈະບໍ່ສາມາດກ້າວເຂົ້າສູ່ຍຸກໃໝ່ ຫຼື ຮັບຄວາມລອດພົ້ນທີ່ສົມບູນຈາກພຣະເຈົ້າໄດ້!

# ມີພຽງຄົນທີ່ຮູ້ຈັກພຣະເຈົ້າ ແລະ ພາລະກິດຂອງພຣະອົງເທົ່ານັ້ນ ທີ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້

ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດປະກອບດ້ວຍສອງສ່ວນ. ຄັ້ງທຳອິດ ພຣະອົງໄດ້ຊົງມາເປັນມະນຸດ, ຜູ້ຄົນບໍ່ເຊື່ອໃນພຣະອົງ ຫຼື ຮູ້ຈັກພຣະອົງ ແລະ ໄດ້ຄຶງພຣະເຢຊູທີ່ໄມ້ກາງແຂນ. ຄັ້ງທີສອງ ຜູ້ຄົນກໍບໍ່ໄດ້ເຊື່ອໃນພຣະອົງເຊັ່ນດຽວກັນ ເຊິ່ງຢ່າວ່າແຕ່ຮູ້ຈັກພຣະອົງເລີຍ ແລະ ຜູ້ຄົນຍັງໄດ້ຄຶງພຣະຄຣິດທີ່ໄມ້ກາງແຂນດ້ວຍຕະປູອີກຄັ້ງ. ມະນຸດບໍ່ແມ່ນສັດຕູຂອງພຣະເຈົ້າບໍ? ຖ້າມະນຸດບໍ່ຮູ້ຈັກພຣະອົງ ແລ້ວພວກເຂົາຈະສາມາດເປັນຜູ້ໃກ້ຊິດກັບພຣະເຈົ້າໄດ້ແນວໃດ? ເຂົາຈະສາມາດມີຄຸນສົມບັດໃນການເປັນພະຍານໃຫ້ກັບພຣະເຈົ້າໄດ້ແນວໃດ? ການອ້າງວ່າ ຮັກພຣະເຈົ້າ, ຮັບໃຊ້ພຣະເຈົ້າ ແລະ ສັນລະເສີນພຣະເຈົ້າບໍ່ແມ່ນຄຳຫຼອກຫຼວງບໍ? ຖ້າເຈົ້າອຸທິດຊີວິດຂອງເຈົ້າໃຫ້ກັບສິ່ງທີ່ບໍ່ເປັນຈິງ ແລະ ບໍ່ມີປະໂຫຍດເຫຼົ່ານີ້, ເຈົ້າຈະບໍ່ໄດ້ພະຍາຍາມຢ່າງບໍ່ເປັນປະໂຫຍດບໍ? ເຈົ້າຈະສາມາດເປັນຜູ້ໃກ້ຊິດກັບພຣະເຈົ້າໄດ້ແນວໃດ ເມື່ອເຈົ້າກໍຍັງບໍ່ຮູ້ວ່າ ພຣະເຈົ້າແມ່ນໃຜ? ການສະແຫວງຫາດັ່ງກ່າວບໍ່ແມ່ນການທີ່ບໍ່ແຈ່ມແຈ້ງ ແລະ ບໍ່ມີຕົວຕົນບໍ? ມັນບໍ່ແມ່ນການຫຼອກຫຼວງບໍ? ບຸກຄົນໜຶ່ງຈະສາມາດເປັນຜູ້ໃກ້ຊິດກັບພຣະເຈົ້າໄດ້ແນວໃດ? ຄວາມໝາຍທີ່ແທ້ຈິງຂອງການເປັນຜູ້ໃກ້ຊິດຂອງພຣະເຈົ້າແມ່ນຫຍັງ? ເຈົ້າສາມາດເປັນຜູ້ໃກ້ຊິດຂອງພຣະວິນຍານຂອງພຣະເຈົ້າບໍ? ເຈົ້າສາມາດເຫັນບໍວ່າພຣະວິນຍານຍິ່ງໃຫຍ່ ແລະ ສູງສົ່ງພຽງໃດ? ເພື່ອເປັນຜູ້ໃກ້ຊິດຂອງພຣະເຈົ້າ ທີ່ບໍ່ສາມາດແນມເຫັນ ແລະ ຈັບຕ້ອງໄດ້ ເຊິ່ງນັ້ນບໍ່ແມ່ນສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ມີຕົວຕົນບໍ? ຄວາມໝາຍທີ່ແທ້ຈິງຂອງການສະແຫວງຫາດັ່ງກ່າວແມ່ນຫຍັງ? ມັນບໍ່ແມ່ນຄຳຫຼອກຫຼວງທັງໝົດບໍ? ສິ່ງທີ່ເຈົ້າສະແຫວງຫາກໍຄືການມາເປັນຜູ້ໃກ້ຊິດຂອງພຣະເຈົ້າ ແຕ່ໃນຄວາມເປັນຈິງ ເຈົ້າເປັນໝາຮັບໃຊ້ຂອງຊາຕານ ຍ້ອນເຈົ້າບໍ່ຮູ້ຈັກພຣະເຈົ້າ ແລະ ສະແຫວງຫາ "ພຣະເຈົ້າແຫ່ງທຸກສິ່ງທັງປວງ" ທີ່ບໍ່ມີຢູ່ຈິງ ເຊິ່ງບໍ່ສາມາດແນມເຫັນ, ຈັບຕ້ອງໄດ້ ແລະ ມາຈາກແນວຄວາມຄິດຂອງເຈົ້າເອງ. ຖ້າຈະເວົ້າແບບບໍ່ແຈ່ມແຈ້ງກໍຄື "ພຣະເຈົ້າ" ດັ່ງກ່າວແມ່ນຊາຕານ ແລະ ຖ້າຈະເວົ້າຢ່າງຖືກຕ້ອງກໍຄື ມັນເປັນຕົວເຈົ້າເອງ. ເຈົ້າສະແຫວງຫາເພື່ອເປັນຜູ້ໃກ້ຊິດຂອງຕົວເຈົ້າເອງ ແຕ່ຍັງບອກວ່າ ເຈົ້າສະແຫວງຫາ ເພື່ອເປັນຜູ້ໃກ້ຊິດຂອງພຣະເຈົ້າ ເຊິ່ງນັ້ນບໍ່ແມ່ນການໝິ່ນປະໝາດບໍ? ແມ່ນຫຍັງຄືຄຸນຄ່າຂອງການສະແຫວງຫາດັ່ງກ່າວ? ຖ້າພຣະວິນຍານຂອງພຣະເຈົ້າບໍ່ໄດ້ກາຍມາເປັນມະນຸດ ແລ້ວແກ່ນແທ້ຂອງພຣະເຈົ້າກໍເປັນພຽງພຣະວິນຍານແຫ່ງຊີວິດທີ່ບໍ່ສາມາດແນມເຫັນ ແລະ ຈັບຕ້ອງບໍ່ໄດ້, ບໍ່ມີຮູບຊົງ ແລະ ບໍ່ມີຮ່າງທີ່ແນ່ນອນ ເຊິ່ງເປັນປະເພດທີ່ບໍ່ແມ່ນວັດຖຸ, ເປັນວິນຍານທີ່ມະນຸດບໍ່ສາມາດເຂົ້າເຖິງ ແລະ ເຂົ້າໃຈໄດ້. ມະນຸດຈະສາມາດເປັນຜູ້ໃກ້ຊິດຂອງພຣະວິນຍານທີ່ບໍ່ມີຕົວຕົນ, ອັດສະຈັນ ແລະ ບໍ່ສາມາດຢັ່ງເຖິງເຊັ່ນນີ້ໄດ້ແນວໃດ? ມັນບໍ່ແມ່ນເລື່ອງຕະຫຼົກບໍ? ການໃຫ້ເຫດຜົນທີ່ໂງ່ຈ້າແບບນັ້ນໃຊ້ບໍ່ໄດ້ ແລະ ບໍ່ມີປະໂຫຍດ. ມະນຸດທີ່ຖືກສ້າງຂຶ້ນແມ່ນແຕກຕ່າງຈາກພຣະວິນຍານຂອງພຣະເຈົ້າໂດຍທຳມະຊາດ

ເຊິ່ງດ້ວຍເຫດນັ້ນ ທັງສອງຈະສາມາດເປັນຜູ້ໃກ້ຊິດກັນໄດ້ແນວໃດ? ຖ້າພຣະວິນຍານຂອງພຣະເຈົ້າບໍ່ໄດ້ຖືກເຮັດໃຫ້ເປັນຈິງໃນເນື້ອໜັງ, ຖ້າພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງ ແລະ ຖ່ອມຕົວພຣະອົງເອງດ້ວຍການມາເປັນສິ່ງຊົງສ້າງ ແລ້ວມະນຸດທີ່ຖືກສ້າງຂຶ້ນກໍຈະບໍ່ມີຄຸນສົມບັດ ແລະ ບໍ່ສາມາດເປັນຜູ້ໃກ້ຊິດຂອງພຣະອົງໄດ້ ແລະ ນອກຈາກຜູ້ເຊື່ອເຫຼົ່ານັ້ນທີ່ດຳເນີນຊີວິດຕາມພຣະເຈົ້າ ຜູ້ທີ່ອາດມີໂອກາດກາຍມາເປັນຜູ້ໃກ້ຊິດຂອງພຣະເຈົ້າຫຼັງຈາກທີ່ວິນຍານຂອງພວກເຂົາເຂົ້າສູ່ສະຫວັນ, ຜູ້ຄົນສ່ວນຫຼາຍຈະບໍ່ສາມາດເປັນຜູ້ໃກ້ຊິດກັບພຣະວິນຍານຂອງພຣະເຈົ້າໄດ້. ຖ້າມະນຸດຕ້ອງການກາຍມາເປັນຜູ້ໃກ້ຊິດຂອງພຣະເຈົ້າໃນສວງສະຫວັນ ພາຍໃຕ້ການນຳພາຂອງພຣະເຈົ້າໃນຮ່າງຂອງມະນຸດ, ແລ້ວເຂົາບໍ່ແມ່ນຜູ້ທີ່ໂງ່ຈ້າຢ່າງເປັນຕາງຶດທີ່ບໍ່ແມ່ນມະນຸດບໍ? ມະນຸດພຽງແຕ່ສະແຫວງຫາ "ຄວາມຊື່ສັດ" ຕໍ່ພຣະເຈົ້າທີ່ບໍ່ສາມາດແນມເຫັນໄດ້ ແລະ ບໍ່ສົນໃຈແມ່ນແຕ່ເລັກນ້ອຍຕໍ່ພຣະເຈົ້າທີ່ສາມາດແນມເຫັນໄດ້ ຍ້ອນມັນງ່າຍຫຼາຍທີ່ຈະສະແຫວງຫາພຣະເຈົ້າທີ່ບໍ່ສາມາດແນມເຫັນໄດ້ ເຊິ່ງມະນຸດສາມາດເຮັດຢ່າງໃດກໍໄດ້ຕາມທີ່ເຂົາມັກ. ແຕ່ການສະແຫວງຫາພຣະເຈົ້າທີ່ສາມາດແນມເຫັນໄດ້ບໍ່ໄດ້ງ່າຍແບບນັ້ນ. ມະນຸດທີ່ສະແຫວງຫາພຣະເຈົ້າທີ່ບໍ່ແຈ່ມແຈ້ງບໍ່ສາມາດໄດ້ຮັບພຣະເຈົ້າໃນທີ່ສຸດ ຍ້ອນສິ່ງຕ່າງໆທີ່ບໍ່ແຈ່ມແຈ້ງ ແລະ ບໍ່ມີຕົວຕົນລ້ວນແລ້ວແຕ່ແມ່ນຈິນຕະນາການຂອງມະນຸດ ແລະ ມະນຸດກໍບໍ່ສາມາດຮັບໄດ້. ຖ້າພຣະເຈົ້າທີ່ລົງມາທ່າມກາງພວກເຈົ້າເປັນພຣະເຈົ້າທີ່ເປັນຕານັບຖື ແລະ ສູງສົ່ງ ເຊິ່ງພວກເຈົ້າບໍ່ສາມາດເຂົ້າເຖິງໄດ້, ແລ້ວພວກເຈົ້າຈະເຂົ້າໃຈຄວາມປະສົງຂອງພຣະອົງໄດ້ແນວໃດ? ແລ້ວພວກເຈົ້າຈະຮູ້ ແລະ ເຂົ້າໃຈພຣະອົງໄດ້ແນວໃດ? ຖ້າພຣະອົງພຽງແຕ່ປະຕິບັດພາລະກິດຂອງພຣະອົງ ແລະ ບໍ່ມີການຕິດຕໍ່ພົວພັນແບບປົກກະຕິກັບມະນຸດ ຫຼື ມີຄວາມເປັນມະນຸດທີ່ບໍ່ປົກກະຕິ ແລະ ມະນຸດບໍ່ສາມາດເຂົ້າເຖິງໄດ້ ແລ້ວເຖິງແມ່ນວ່າ ພຣະອົງຈະປະຕິບັດພາລະກິດຫຼາຍຢ່າງເພື່ອພວກເຈົ້າ ແຕ່ພວກເຈົ້າກໍບໍ່ໄດ້ຕິດຕໍ່ພົວພັນກັບພຣະອົງ ແລະ ບໍ່ສາມາດແນມເຫັນພຣະອົງ, ແລ້ວພວກເຈົ້າຈະສາມາດຮູ້ຈັກກັບພຣະອົງໄດ້ແນວໃດ? ຖ້າມັນບໍ່ແມ່ນຍ້ອນເນື້ອໜັງຂອງຄວາມເປັນມະນຸດທີ່ທຳມະດານີ້, ມະນຸດຈະບໍ່ມີທາງຮູ້ຈັກກັບພຣະເຈົ້າ; ມັນເປັນພຽງຍ້ອນການບັງເກີດເປັນມະນຸດຂອງພຣະເຈົ້າທີ່ເຮັດໃຫ້ມະນຸດມີຄຸນສົມບັດໃນການເປັນຜູ້ໃກ້ຊິດກັບພຣະເຈົ້າທີ່ເປັນເນື້ອໜັງ. ມະນຸດກາຍເປັນຜູ້ໃກ້ຊິດຂອງພຣະເຈົ້າ ຍ້ອນມະນຸດພົວພັນຕິດຕໍ່ກັບພຣະອົງ, ຍ້ອນມະນຸດດຳລົງຊີວິດຢູ່ກັບພຣະອົງ ແລະ ຢູ່ຮ່ວມກັນກັບພຣະອົງ ແລະ ດ້ວຍເຫດນັ້ນ ຈຶ່ງຮູ້ຈັກພຣະເຈົ້າເທື່ອລະໜ້ອຍ. ຖ້າມັນບໍ່ເປັນດັ່ງນັ້ນ ການສະແຫວງຫາຂອງມະນຸດກໍຈະບໍ່ເປັນປະໂຫຍດເລີຍບໍ? ນັ້ນກໍເພື່ອຈະເວົ້າວ່າມັນບໍ່ແມ່ນທຸກສິ່ງ ຍ້ອນພາລະກິດຂອງພຣະເຈົ້າ ມະນຸດຈຶ່ງສາມາດເປັນຜູ້ໃກ້ຊິດຂອງພຣະເຈົ້າ ແຕ່ຍ້ອນຄວາມເປັນຈິງ ແລະ ຄວາມປົກກະຕິຂອງພຣະເຈົ້າໃນຮ່າງຂອງມະນຸດ. ມັນພຽງແຕ່ເປັນຍ້ອນພຣະເຈົ້າກາຍມາເປັນເນື້ອໜັງ ມະນຸດຈຶ່ງມີໂອກາດປະຕິບັດໜ້າທີ່ຂອງເຂົາ ແລະ ມີໂອກາດນະມັດສະການພຣະເຈົ້າທີ່ແທ້ຈິງ. ນີ້ບໍ່ແມ່ນຄວາມຈິງທີ່ເປັນຈິງ ແລະ ມີປະໂຫຍດທີ່ສຸດບໍ? ບັດນີ້ ເຈົ້າຍັງຕ້ອງການເປັນຜູ້ໃກ້ຊິດຂອງພຣະເຈົ້າໃນສວງສະຫວັນບໍ? ເມື່ອພຣະເຈົ້າຖ່ອມຕົວພຣະອົງລົງມາໃນຈຸດໃດໜຶ່ງເທົ່ານັ້ນ ເຊິ່ງເວົ້າໄດ້ວ່າ ເມື່ອພຣະເຈົ້າກາຍມາເປັນເນື້ອໜັງເທົ່ານັ້ນ, ມະນຸດຈຶ່ງຈະສາມາດ

ເປັນຜູ້ໃກ້ຊິດ ແລະ ຄົນໄວ້ໃຈຂອງພຣະອົງໄດ້. ພຣະເຈົ້າແມ່ນພຣະວິນຍານ: ມະນຸດມີຄຸນສົມບັດໃນການເປັນຜູ້ໃກ້ຊິດຂອງພຣະວິນຍານອົງນີ້ ຜູ້ທີ່ສູງສົ່ງ ແລະ ບໍ່ສາມາດຢັ່ງເຖິງໄດ້ແນວໃດ? ເມື່ອພຣະວິນຍານຂອງພຣະເຈົ້າລົງມາເປັນເນື້ອໜັງ ແລະ ກາຍມາເປັນສິ່ງຊົງສ້າງທີ່ມີລັກສະນະພາຍນອກຄືກັບມະນຸດເທົ່ານັ້ນ, ມະນຸດຈຶ່ງສາມາດເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຖືກພຣະອົງຮັບເອົາຢ່າງແທ້ຈິງ. ພຣະອົງຊົງກ່າວ ແລະ ປະຕິບັດພາລະກິດໂດຍຜ່ານເນື້ອໜັງ, ແບ່ງປັນຄວາມສຸກ, ຄວາມໂສກເສົ້າ ແລະ ຄວາມລຳບາກຍາກແຄ້ນຂອງມະນຸດ, ດຳລົງຊີວິດໃນແຜ່ນດິນໂລກດຽວກັນກັບມະນຸດ, ປົກປ້ອງມະນຸດ ແລະ ນຳພາມະນຸດ ແລະ ດ້ວຍວິທີນີ້ ພຣະອົງຈຶ່ງຊໍາລະລ້າງມະນຸດໃຫ້ບໍລິສຸດ ແລະ ເຮັດໃຫ້ມະນຸດໄດ້ຮັບການໄຖ່ບາບຈາກພຣະອົງ ແລະ ພຣະພອນຂອງພຣະອົງ. ເມື່ອໄດ້ຮັບສິ່ງເຫຼົ່ານີ້ ມະນຸດຈຶ່ງເຂົ້າໃຈຄວາມປະສົງຂອງພຣະເຈົ້າຢ່າງແທ້ຈິງ ແລະ ດ້ວຍເຫດນີ້ເອງ ມະນຸດຈຶ່ງສາມາດເປັນຜູ້ໃກ້ຊິດຂອງພຣະເຈົ້າ. ພຽງແຕ່ສິ່ງນີ້ທີ່ເປັນປະໂຫຍດ. ຖ້າມະນຸດບໍ່ສາມາດແນມເຫັນ ແລະ ຈັບຕ້ອງພຣະເຈົ້າໄດ້, ມະນຸດຈະສາມາດເປັນຜູ້ໃກ້ຊິດຂອງພຣະອົງໄດ້ແນວໃດ? ນີ້ບໍ່ແມ່ນທິດສະດີທີ່ວ່າງເປົ່າບໍ?

ໃນການໄດ້ເຊື່ອໃນພຣະເຈົ້າຈົນຮອດປັດຈຸບັນ, ຫຼາຍຄົນຍັງສະແຫວງຫາສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ມີຕົວຕົນ. ພວກເຂົາບໍ່ເຂົ້າໃຈເຖິງຄວາມເປັນຈິງຂອງພາລະກິດຂອງພຣະເຈົ້າໃນປັດຈຸບັນ ແລະ ຍັງດຳລົງຊີວິດທ່າມກາງໜັງສື ແລະ ທິດສະດີ. ຍິ່ງໄປກວ່ານັ້ນ, ຫຼາຍຄົນຍັງບໍ່ໄດ້ເຂົ້າສູ່ຄວາມເປັນຈິງຂອງວະລີໃໝ່ເຊັ່ນ “ຄົນຮຸ່ນໃໝ່ທີ່ຮັກພຣະເຈົ້າ”, “ຜູ້ໃກ້ຊິດຂອງພຣະເຈົ້າ”, “ແບບຢ່າງ ແລະ ຕົວຢ່າງໃນຄວາມຮັກຂອງພຣະເຈົ້າ”, “ລັກສະນະຂອງເປໂຕ”; ໃນທາງກົງກັນຂ້າມ, ການສະແຫວງຫາຂອງພວກເຂົາຍັງບໍ່ແຈ່ມແຈ້ງ ແລະ ບໍ່ມີຕົວຕົນ, ພວກເຂົາຍັງຊອກຫາທິດສະດີ ແລະ ພວກເຂົາບໍ່ມີຄວາມເຂົ້າໃຈໃນຄວາມເປັນຈິງຂອງພຣະທຳເຫຼົ່ານີ້. ເມື່ອພຣະວິນຍານຂອງພຣະເຈົ້າກາຍມາເປັນເນື້ອໜັງ, ເຈົ້າຈະສາມາດເຫັນ ແລະ ຈັບຕ້ອງພາລະກິດຂອງພຣະອົງທີ່ເປັນເນື້ອໜັງໄດ້. ແຕ່ຖ້າເຈົ້າບໍ່ສາມາດກາຍມາເປັນຜູ້ໃກ້ຊິດຂອງພຣະອົງ, ຖ້າເຈົ້າຍັງບໍ່ສາມາດເປັນຜູ້ທີ່ພຣະອົງໄວ້ໃຈ ແລ້ວເຈົ້າຈະສາມາດເປັນຜູ້ທີ່ພຣະວິນຍານຂອງພຣະເຈົ້າໄວ້ໃຈໄດ້ແນວໃດ? ຖ້າເຈົ້າບໍ່ຮູ້ຈັກພຣະເຈົ້າແຫ່ງຍຸກປັດຈຸບັນ, ເຈົ້າຈະເປັນຄົນໜຶ່ງໃນບັນດາຄົນຮຸ່ນໃໝ່ທີ່ຮັກພຣະເຈົ້າໄດ້ແນວໃດ? ສິ່ງເຫຼົ່ານີ້ບໍ່ແມ່ນໜັງສື ແລະ ທິດສະດີທີ່ວ່າງເປົ່າບໍ? ເຈົ້າສາມາດເຫັນພຣະວິນຍານ ແລະ ເຂົ້າໃຈຄວາມປະສົງຂອງພຣະອົງບໍ? ສິ່ງເຫຼົ່ານີ້ບໍ່ແມ່ນຄຳເວົ້າທີ່ວ່າງເປົ່າບໍ? ມັນບໍ່ພຽງພໍທີ່ຈະໃຫ້ເຈົ້າກ່າວວະລີ ແລະ ຄຳສັບເຫຼົ່ານີ້ຢ່າງງ່າຍດາຍ ຫຼື ເຈົ້າບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໂດຍຜ່ານການຕັດສິນໃຈຢ່າງແນວແນ່ເທົ່ານັ້ນ. ເຈົ້າພໍໃຈກັບການກ່າວຄຳເວົ້າເຫຼົ່ານີ້ເທົ່ານັ້ນ ແລະ ເຈົ້າເຮັດແບບນັ້ນກໍເພື່ອຕອບສະໜອງຄວາມຕ້ອງການຂອງເຈົ້າ, ເພື່ອຕອບສະໜອງອຸດົມການທີ່ບໍ່ເປັນຈິງຂອງເຈົ້າເອງ ແລະ ເພື່ອຕອບສະໜອງແນວຄວາມຄິດ ແລະ ຄວາມຄິດຂອງເຈົ້າເອງ. ຖ້າເຈົ້າບໍ່ຮູ້ຈັກພຣະເຈົ້າໃນຍຸກປັດຈຸບັນ ເຈົ້າກໍຈະບໍ່ສາມາດຕອບສະໜອງຄວາມຕ້ອງການຂອງຈິດໃຈຂອງພຣະເຈົ້າໄດ້ ບໍ່ວ່າເຈົ້າຈະເຮັດຫຍັງກໍຕາມ. ການເປັນຜູ້ທີ່ພຣະເຈົ້າໄວ້ໃຈໝາຍເຖິງຫຍັງ? ເຈົ້າຍັງບໍ່ເຂົ້າໃຈສິ່ງນີ້ບໍ? ເມື່ອຜູ້ໃກ້ຊິດຂອງພຣະເຈົ້າເປັນມະນຸດ, ສະນັ້ນ

ພຣະເຈົ້າກໍເປັນມະນຸດຄືກັນ, ເຊິ່ງກໍຄື ພຣະເຈົ້າໄດ້ກາຍເປັນເນື້ອໜັງ, ໄດ້ກາຍມາເປັນມະນຸດ. ມີແຕ່ຄົນເຫຼົ່ານັ້ນທີ່ມີລັກສະນະແບບດຽວກັນ ທີ່ຈະສາມາດເອີ້ນກັນ ແລະ ກັນວ່າ ເປັນຜູ້ທີ່ໄວ້ໃຈໄດ້ ເຊິ່ງເມື່ອເຖິງເວລານັ້ນ ຈຶ່ງຈະສາມາດພິຈາລະນາພວກເຂົາໃຫ້ເປັນຜູ້ໃກ້ຊິດໄດ້. ຖ້າພຣະເຈົ້າແມ່ນພຣະວິນຍານ ແລ້ວມະນຸດທີ່ຖືກສ້າງຂຶ້ນຈະສາມາດເປັນຜູ້ໃກ້ຊິດຂອງພຣະອົງໄດ້ແນວໃດ?

ຄວາມເຊື່ອໃນພຣະເຈົ້າຂອງເຈົ້າ, ການສະແຫວງຫາຄວາມຈິງຂອງເຈົ້າ ແລະ ແມ່ນແຕ່ແນວທາງທີ່ເຈົ້າປະພຶດຕົວແມ່ນຕ້ອງອີງຕາມຄວາມເປັນຈິງທັງໝົດ: ທຸກສິ່ງທີ່ເຈົ້າເຮັດຕ້ອງເປັນຈິງ ແລະ ເຈົ້າບໍ່ຄວນສະແຫວງຫາສິ່ງທີ່ເປັນພາບລວງຕາ ແລະ ເພີ້ຝັນ. ມັນບໍ່ມີຄຸນຄ່າຫຍັງຈາກການປະພຶດຕົວແບບນີ້ ແລະ ນອກຈາກນັ້ນ ກໍບໍ່ມີຄວາມໝາຍຫຍັງກັບຊີວິດ. ຍ້ອນການສະແຫວງຫາ ແລະ ການໃຊ້ຊີວິດຂອງເຈົ້າໃນສິ່ງທີ່ຜິດ ແລະ ຫຼອກຫຼວງ ແລະ ເຈົ້າບໍ່ໄດ້ສະແຫວງຫາສິ່ງທີ່ມີຄຸນຄ່າ ແລະ ມີຄວາມໝາຍ, ສິ່ງດຽວທີ່ເຈົ້າຈະໄດ້ຮັບກໍຄືເຫດຜົນທີ່ໂງ່ຈ້າ ແລະ ທິດສະດີທີ່ບໍ່ໄດ້ມາຈາກຄວາມຈິງ. ສິ່ງເຫຼົ່ານີ້ບໍ່ມີສ່ວນພົວພັນກັບຄວາມໝາຍ ແລະ ຄຸນຄ່າຂອງການມີຕົວຕົນຂອງເຈົ້າ ແລະ ພຽງແຕ່ຈະສາມາດນຳເຈົ້າເຂົ້າສູ່ອານາຈັກທີ່ເປົ່າວ່າງ. ດ້ວຍວິທີນີ້ ຊີວິດທັງໝົດຂອງເຈົ້າຈະປາສະຈາກຄຸນຄ່າ ຫຼື ຄວາມໝາຍ ແລະ ຖ້າເຈົ້າບໍ່ສະແຫວງຫາຊີວິດທີ່ມີຄວາມໝາຍ ແລ້ວເຈົ້າຈະສາມາດມີຊີວິດຢູ່ເປັນເວລາຮ້ອຍປີ ແລະ ຈະບໍ່ໄດ້ຢູ່ເພື່ອຫຍັງເລີຍ. ສິ່ງນັ້ນເອີ້ນວ່າ ຊີວິດມະນຸດໄດ້ແນວໃດ? ມັນບໍ່ແມ່ນຊີວິດຂອງສັດແທ້ໆບໍ? ໃນທຳນອງດຽວກັນ, ຖ້າພວກເຈົ້າພະຍາຍາມຕິດຕາມເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າ ແຕ່ບໍ່ພະຍາຍາມສະແຫວງຫາພຣະເຈົ້າທີ່ສາມາດແນມເຫັນໄດ້ ແລະ ໃນທາງກົງກັນຂ້າມໄດ້ນະມັດສະການພຣະເຈົ້າທີ່ບໍ່ສາມາດແນມເຫັນ ແລະ ຈັບຕ້ອງໄດ້ ແລ້ວການສະແຫວງຫາດັ່ງກ່າວແຮງຈະບໍ່ມີປະໂຫຍດຂຶ້ນຕື່ມບໍ? ໃນທີ່ສຸດ ການສະແຫວງຫາຂອງເຈົ້າຈະກາຍເປັນກອງຊາກຫັກພັງ. ການສະແຫວງຫາດັ່ງກ່າວຈະນຳປະໂຫຍດຫຍັງມາສູ່ເຈົ້າ? ບັນຫາທີ່ໃຫຍ່ທີ່ສຸດກັບມະນຸດກໍຄື ເຂົາພຽງແຕ່ຮັກໃນສິ່ງທີ່ເຂົາບໍ່ສາມາດແນມເຫັນ ຫຼື ຈັບຕ້ອງໄດ້, ສິ່ງທີ່ລຶກລັບ ແລະ ອັດສະຈັນທີ່ສຸດ ແລະ ສິ່ງທີ່ມະນຸດຈິນຕະນາການບໍ່ເຖິງ ແລະ ສິ່ງທີ່ມະນຸດທຳມະດາບໍ່ສາມາດຮັບຮູ້ໄດ້. ເມື່ອສິ່ງເຫຼົ່ານີ້ບໍ່ສົມຈິງຫຼາຍສໍ່າໃດ, ສິ່ງເຫຼົ່ານີ້ກໍຈະຖືກວິເຄາະໂດຍມະນຸດຫຼາຍສໍ່ານັ້ນ ເຊິ່ງເປັນຄົນທີ່ສະແຫວງຫາສິ່ງເຫຼົ່ານີ້ໂດຍບໍ່ໃສ່ໃຈສິ່ງອື່ນໆ ແລະ ຈະພະຍາຍາມຮັບເອົາສິ່ງເຫຼົ່ານີ້. ຍິ່ງພວກມັນບໍ່ສົມຈິງຫຼາຍສໍ່າໃດ, ມະນຸດກໍຈະພິຈາລະນາຢ່າງຖີ່ຖ້ວນ ແລະ ວິເຄາະພວກມັນຢ່າງໃກ້ຊິດຫຼາຍສໍ່ານັ້ນ ແລະ ອາດເຮັດຫຼາຍກວ່ານັ້ນເຖິງຂັ້ນສ້າງແນວຄວາມຄິດກ່ຽວກັບສິ່ງເຫຼົ່ານັ້ນຢ່າງທົ່ວເຖິງຂຶ້ນມາເອງ. ໃນທາງກົງກັນຂ້າມ, ເມື່ອທຸກສິ່ງເປັນຈິງຫຼາຍສໍ່າໃດ, ມະນຸດກໍຈະບໍ່ສົນໃຈພວກມັນຫຼາຍສໍ່ານັ້ນ; ເຂົາພຽງແຕ່ດູໝິ່ນ ແລະ ຍັງສະແດງຄວາມດູຖູກພວກມັນອີກດ້ວຍ. ນີ້ບໍ່ແມ່ນທ່າທີຢ່າງແທ້ຈິງຂອງພວກເຈົ້າກ່ຽວກັບພາລະກິດທີ່ເປັນຄວາມຈິງທີ່ເຮົາໄດ້ປະຕິບັດໃນປັດຈຸບັນບໍ? ເມື່ອສິ່ງດັ່ງກ່າວເປັນຄວາມຈິງຫຼາຍສໍ່າໃດ ພວກເຈົ້າກໍຈະມີອະຄະຕິກັບພວກມັນຫຼາຍສໍ່ານັ້ນ. ພວກເຈົ້າບໍ່ນຳໃຊ້ເວລາວ່າງໃນການພິຈາລະນາພວກມັນ ມີພຽງແຕ່ເມີນເສີຍຕໍ່ພວກມັນ; ພວກເຈົ້າດູຖູກເງື່ອນໄຂທີ່ເປັນຄວາມຈິງ ແລະ ມາດຕະຖານຕໍ່າເຫຼົ່ານີ້ ແລະ ຍັງເຊື່ອງແນວຄວາມຄິດຫຼາຍຢ່າງກ່ຽວກັບພຣະເຈົ້າອົງນີ້ທີ່ເປັນຈິງທີ່ສຸດ ແລະ ບໍ່ສາມາດຍອມຮັບ

ຄວາມເປັນຈິງ ແລະ ຄວາມປົກກະຕິຂອງພຣະອົງຢ່າງງ່າຍດາຍ. ດ້ວຍວິທີນີ້, ພວກເຈົ້າບໍ່ໄດ້ເຊື່ອໃນທ່າມກາງຄວາມບໍ່ແຈ່ມແຈ້ງບໍ? ພວກເຈົ້າມີຄວາມເຊື່ອທີ່ບໍ່ຫວັ່ນໄຫວໄດ້ໃນພຣະເຈົ້າທີ່ບໍ່ແຈ່ມແຈ້ງແຫ່ງຍຸກອະດີດ ແລະ ບໍ່ສົນໃຈໃນພຣະເຈົ້າທີ່ແທ້ຈິງແຫ່ງຍຸກປັດຈຸບັນ. ນີ້ບໍ່ແມ່ນຍ້ອນພຣະເຈົ້າແຫ່ງອະດີດ ແລະ ພຣະເຈົ້າແຫ່ງປັດຈຸບັນມາຈາກສອງຍຸກສະໄໝທີ່ແຕກຕ່າງກັນບໍ? ນີ້ບໍ່ແມ່ນຍ້ອນພຣະເຈົ້າແຫ່ງອະດີດແມ່ນພຣະເຈົ້າແຫ່ງສວງສະຫວັນທີ່ຖືກສັນລະເສີນ ໃນຂະນະທີ່ພຣະເຈົ້າແຫ່ງປັດຈຸບັນເປັນພຽງມະນຸດນ້ອຍໆເທິງແຜ່ນດິນໂລກບໍ? ນອກຈາກນັ້ນ, ມັນບໍ່ແມ່ນຍ້ອນພຣະເຈົ້າທີ່ມະນຸດນະມັດສະການແມ່ນພຣະເຈົ້າທີ່ມະນຸດສ້າງຂຶ້ນຈາກແນວຄວາມຄິດຂອງເຂົາບໍ ໃນຂະນະທີ່ພຣະເຈົ້າແຫ່ງປັດຈຸບັນແມ່ນເນື້ອໜັງຢ່າງແທ້ຈິງທີ່ຖືກສ້າງຂຶ້ນຢູ່ເທິງແຜ່ນດິນໂລກ? ເມື່ອທຸກຢ່າງຖືກກ່າວເຖິງ ແລະ ດຳເນີນຢ່າງສົມບູນ, ມັນບໍ່ແມ່ນຍ້ອນພຣະເຈົ້າແຫ່ງປັດຈຸບັນເປັນຈິງເກີນໄປ ຈົນມະນຸດບໍ່ສະແຫວງຫາພຣະອົງບໍ? ຍ້ອນສິ່ງທີ່ພຣະເຈົ້າແຫ່ງປັດຈຸບັນຂໍຮ້ອງຈາກມະນຸດແມ່ນສິ່ງທີ່ມະນຸດບໍ່ເຕັມໃຈປະຕິບັດຢ່າງແທ້ຈິງ ແລະ ເຮັດໃຫ້ເຂົາຮູ້ສຶກອັບອາຍ. ນີ້ບໍ່ແມ່ນການເຮັດໃຫ້ສິ່ງຕ່າງໆຍາກສຳລັບມະນຸດບໍ? ສິ່ງນີ້ບໍ່ໄດ້ເປີດຮອຍບາດແຜຂອງເຂົາບໍ? ດ້ວຍວິທີນີ້, ຫຼາຍຄົນບໍ່ສະແຫວງຫາພຣະເຈົ້າຕົວຈິງ, ພຣະເຈົ້າທີ່ເປັນຈິງ ແລະ ດ້ວຍເຫດນັ້ນ ພວກເຂົາກໍກາຍມາເປັນສັດຕູຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ເຊິ່ງນັ້ນກໍ່ຄື ຜູ້ຕໍ່ຕ້ານພຣະຄຣິດ. ນີ້ບໍ່ແມ່ນຄວາມຈິງທີ່ເຫັນໄດ້ຢ່າງຊັດເຈນບໍ? ໃນອະດີດ, ເມື່ອພຣະເຈົ້າຍັງບໍ່ໄດ້ມາເປັນເນື້ອໜັງເທື່ອ ເຈົ້າອາດເປັນບຸກຄົນທາງສາສະໜາ ຫຼື ຜູ້ເຊື່ອທີ່ເຫຼື້ອມໃສ. ຫຼັງຈາກທີ່ພຣະເຈົ້າມາເປັນເນື້ອໜັງ, ຜູ້ເຊື່ອທີ່ເຫຼື້ອມໃສເຫຼົ່ານັ້ນຫຼາຍຄົນໄດ້ກາຍມາເປັນຜູ້ຕໍ່ຕ້ານພຣະຄຣິດໂດຍບໍ່ໄດ້ເຈດຕະນາ. ເຈົ້າຮູ້ບໍວ່າ ແມ່ນຫຍັງກຳລັງເກີດຂຶ້ນໃນທີ່ແຫ່ງນີ້? ໃນຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າ, ເຈົ້າບໍ່ໄດ້ເອົາໃຈໃສ່ກັບຄວາມເປັນຈິງ ຫຼື ສະແຫວງຫາຄວາມຈິງ ແຕ່ກົງກັນຂ້າມພັດຫຼົງໄຫຼກັບສິ່ງທີ່ຜິດ ແລ້ວນີ້ບໍ່ແມ່ນຕົ້ນຕໍທີ່ຊັດເຈນທີ່ສຸດຂອງການເປັນສັດຕູກັບພຣະເຈົ້າໃນຮ່າງຂອງມະນຸດບໍ? ພຣະເຈົ້າໃນຮ່າງຂອງມະນຸດຖືກເອີ້ນວ່າ ພຣະຄຣິດ, ສະນັ້ນ, ຄົນເຫຼົ່ານັ້ນທຸກຄົນທີ່ບໍ່ເຊື່ອໃນພຣະເຈົ້າໃນຮ່າງຂອງມະນຸດກໍແມ່ນຜູ້ຕໍ່ຕ້ານພຣະຄຣິດແມ່ນບໍ? ດ້ວຍເຫດນັ້ນ, ພຣະເຈົ້າທີ່ເຈົ້າເຊື່ອ ແລະ ຮັກຢ່າງແທ້ຈິງແມ່ນພຣະເຈົ້າໃນຮ່າງຂອງມະນຸດນີ້ບໍ? ພຣະເຈົ້າອົງທີ່ມີຊີວິດ ແລະ ມີລົມຫາຍໃຈອົງນີ້ບໍທີ່ເປັນຈິງ ແລະ ປົກກະຕິແບບພິເສດທີ່ສຸດ? ແມ່ນຫຍັງຄືຈຸດປະສົງຂອງການສະແຫວງຫາຂອງເຈົ້າທີ່ແນ່ນອນ? ມັນຢູ່ໃນສວງສະຫວັນ ຫຼື ເທິງແຜ່ນດິນໂລກບໍ? ມັນແມ່ນແນວຄວາມຄິດ ຫຼື ມັນແມ່ນຄວາມຈິງບໍ? ມັນແມ່ນພຣະເຈົ້າ ຫຼື ມັນແມ່ນສິ່ງທີ່ມີຊີວິດທີ່ເໜືອທຳມະຊາດບາງຢ່າງ? ຕາມຄວາມຈິງແລ້ວ, ຄວາມຈິງແມ່ນສິ່ງທີ່ແທ້ຈິງທີ່ສຸດຂອງຄຳພັງເພີຍແຫ່ງຊີວິດ ແລະ ສິ່ງທີ່ສູງສິ່ງທີ່ສຸດຂອງຄຳພັງເພີຍດັ່ງກ່າວຂອງມະນຸດຊາດທັງໝົດ. ຍ້ອນມັນເປັນສິ່ງທີ່ພຣະເຈົ້າຕ້ອງການໃນມະນຸດ ແລະ ເປັນພາລະກິດທີ່ພຣະເຈົ້າປະຕິບັດດ້ວຍຕົວເອງ, ສະນັ້ນ, ມັນຈຶ່ງຖືກເອີ້ນວ່າ ຄຳພັງເພີຍຂອງຊີວິດ. ມັນບໍ່ແມ່ນຄຳພັງເພີຍທີ່ສະຫຼຸບມາຈາກບາງສິ່ງ ຫຼື ມັນບໍ່ແມ່ນຄຳເວົ້າທີ່ມີຊື່ສຽງຈາກບຸກຄົນທີ່ຍິ່ງໃຫຍ່; ກົງກັນຂ້າມ, ມັນເປັນຖ້ອຍຄຳເຖິງມະນຸດຈາກຜູ້ເປັນເຈົ້ານາຍຂອງສວງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງ ແລະ ບໍ່ແມ່ນຄຳເວົ້າທີ່ມະນຸດສະຫຼຸບ

ແຕ່ເປັນຊີວິດໂດຍທຳມະຊາດຂອງພຣະເຈົ້າ. ດ້ວຍເຫດນັ້ນ, ມັນຈຶ່ງຖືກເອີ້ນວ່າ ເປັນສິ່ງທີ່ສູງສົ່ງທີ່ສຸດຂອງຄຳພັງເພີຍຂອງຊີວິດທັງໝົດ. ການສະແຫວງຫາຂອງມະນຸດໃນການນຳຄວາມຈິງໄປປະຕິບັດແມ່ນການປະຕິບັດໜ້າທີ່ຂອງເຂົາ, ເຊິ່ງນັ້ນກໍຄື ການສະແຫວງຫາເພື່ອຕອບສະໜອງຄວາມຕ້ອງການຂອງພຣະເຈົ້າ. ທາດແທ້ຂອງຄວາມຕ້ອງການນີ້ແມ່ນຄວາມຈິງທັງໝົດທີ່ແທ້ຈິງທີ່ສຸດ ແທນທີ່ຈະເປັນທິດສະດີວ່າງເປົ່າທີ່ບໍ່ມີມະນຸດຄົນໃດສາມາດເຮັດໃຫ້ສຳເລັດໄດ້. ຖ້າການສະແຫວງຫາຂອງເຈົ້າບໍ່ໄດ້ເປັນຫຍັງເລີຍ ນອກຈາກທິດສະດີ ແລະ ບໍ່ປະກອບມີຄວາມເປັນຈິງເລີຍ, ເຈົ້າກໍບໍ່ໄດ້ຕໍ່ຕ້ານຄວາມຈິງບໍ? ເຈົ້າບໍ່ແມ່ນຄົນທີ່ໂຈມຕີຄວາມຈິງບໍ? ຄົນປະເພດນີ້ຈະສາມາດສະແຫວງຫາເພື່ອຮັກພຣະເຈົ້າໄດ້ແນວໃດ? ຜູ້ຄົນທີ່ປາສະຈາກຄວາມເປັນຈິງແມ່ນຄົນເຫຼົ່ານັ້ນທີ່ທໍລະຍົດຄວາມຈິງ ແລະ ເປັນຜູ້ຕໍ່ຕ້ານໂດຍທຳມະຊາດທັງໝົດ!

ບໍ່ວ່າເຈົ້າຈະສະແຫວງຫາແນວໃດ, ສິ່ງທີ່ສຳຄັນທີ່ສຸດຄື ເຈົ້າຕ້ອງເຂົ້າໃຈພາລະກິດທີ່ພຣະເຈົ້າໄດ້ປະຕິບັດໃນປັດຈຸບັນ ແລະ ຕ້ອງຮູ້ຈັກຄວາມໝາຍຂອງພາລະກິດນີ້. ເຈົ້າຕ້ອງເຂົ້າໃຈ ແລະ ຮູ້ຈັກວ່າພາລະກິດຂອງພຣະເຈົ້າຈະນຳຫຍັງມາ ເມື່ອພຣະອົງມາໃນຍຸກສຸດທ້າຍ, ຈິດໃຈແບບໃດທີ່ພຣະອົງຈະນຳມາ ແລະ ແມ່ນຫຍັງຈະຖືກເຮັດໃຫ້ສົມບູນໃນມະນຸດ. ຖ້າເຈົ້າບໍ່ຮູ້ຈັກ ຫຼື ເຂົ້າໃຈພາລະກິດທີ່ພຣະອົງມາປະຕິບັດໃນເນື້ອໜັງ, ແລ້ວເຈົ້າຈະເຂົ້າໃຈຄວາມປະສົງຂອງພຣະອົງໄດ້ແນວໃດ ແລະ ເຈົ້າຈະເປັນຜູ້ໃກ້ຊິດຂອງພຣະອົງໄດ້ແນວໃດ? ຕາມຄວາມເປັນຈິງແລ້ວ, ການເປັນຜູ້ໃກ້ຊິດຂອງພຣະເຈົ້າບໍ່ແມ່ນເລື່ອງທີ່ຊັບຊ້ອນ ແຕ່ມັນກໍບໍ່ແມ່ນເລື່ອງທີ່ງ່າຍ. ຖ້າຜູ້ຄົນສາມາດເຂົ້າໃຈມັນຢ່າງລະອຽດ ແລະ ນຳສິ່ງດັ່ງກ່າວໄປປະຕິບັດ, ມັນກໍຈະບໍ່ຊັບຊ້ອນ; ຖ້າຜູ້ຄົນບໍ່ສາມາດເຂົ້າໃຈສິ່ງດັ່ງກ່າວຢ່າງລະອຽດ, ມັນກໍແຮງຈະຍາກຂຶ້ນກວ່າເກົ່າ ແລະ ນອກຈາກນັ້ນ ມະນຸດກໍຈະມັກສະແຫວງຫາສິ່ງທີ່ຢູ່ທ່າມກາງຄວາມບໍ່ແຈ່ມແຈ້ງ. ຖ້າໃນການສະແຫວງຫາພຣະເຈົ້າ, ມະນຸດບໍ່ມີຈຸດຢືນຂອງຕົນເອງໃຫ້ຮອງຮັບ ແລະ ບໍ່ຮູ້ຈັກຄວາມຈິງທີ່ເຂົາຕ້ອງຍຶດໝັ້ນ, ນັ້ນກໍໝາຍຄວາມວ່າ ເຂົາບໍ່ມີພື້ນຖານ ແລະ ດ້ວຍເຫດນີ້ມັນຈຶ່ງບໍ່ງ່າຍທີ່ເຂົາຈະຍຶດໝັ້ນຢ່າງໝຽວແໜ້ນ. ປັດຈຸບັນນີ້ ມີຫຼາຍຄົນທີ່ບໍ່ເຂົ້າໃຈຄວາມຈິງ ເຊິ່ງເປັນຄົນທີ່ບໍ່ສາມາດຈຳແນກຄວາມດີ ແລະ ຄວາມຊົ່ວ ຫຼື ບອກສິ່ງທີ່ຄວນຮັກ ຫຼື ຊັງ. ຄົນດັ່ງກ່າວຍຶດໝັ້ນຢ່າງໝຽວແໜ້ນໄດ້ຍາກ. ຄຳຕອບສູ່ຄວາມເຊື່ອໃນພຣະເຈົ້າແມ່ນຄວາມສາມາດໃນການນຳຄວາມຈິງໄປປະຕິບັດ, ຄວາມໃສ່ໃຈຕໍ່ຄວາມປະສົງຂອງພຣະເຈົ້າ, ຮູ້ຈັກພາລະກິດຂອງພຣະເຈົ້າທີ່ມີຕໍ່ມະນຸດເມື່ອພຣະອົງມາເປັນເນື້ອໜັງ ແລະ ຫຼັກການທີ່ພຣະອົງຊົງກ່າວອອກມາ; ຢ່າຕິດຕາມຄົນສ່ວນໃຫຍ່ ແລະ ເຈົ້າຕ້ອງມີຫຼັກການທີ່ເຈົ້າຕ້ອງເຂົ້າຮ່ວມ ແລະ ຕ້ອງຍຶດຕິດກັບພວກມັນ. ການຍຶດຕິດຢ່າງໝຽວແໜ້ນກັບສິ່ງເຫຼົ່ານັ້ນທີ່ຢູ່ພາຍໃນເຈົ້າ ເຊິ່ງພຣະເຈົ້າເຮັດໃຫ້ສະຫວ່າງຂຶ້ນ ເປັນການຊ່ວຍເຫຼືອໃຫ້ແກ່ເຈົ້າ. ຖ້າເຈົ້າບໍ່ເຮັດ, ປັດຈຸບັນ ເຈົ້າຈະປ່ຽນທິດໄປທາງໜຶ່ງ, ໃນອະນາຄົດ ເຈົ້າກໍຈະປ່ຽນໄປອີກທາງໜຶ່ງ ແລະ ເຈົ້າຈະບໍ່ໄດ້ຮັບຫຍັງເລີຍທີ່ເປັນຄວາມຈິງ. ການເປັນແບບນີ້ຈະບໍ່ເປັນປະໂຫຍດໃຫ້ກັບຊີວິດຂອງເຈົ້າເອງ. ຄົນເຫຼົ່ານັ້ນທີ່ບໍ່ເຂົ້າໃຈຄວາມຈິງຈະຕິດຕາມຄົນອື່ນຢູ່ຕະຫຼອດເວລາ: ຖ້າຜູ້ຄົນກ່າວວ່ານີ້ແມ່ນພາລະກິດຂອງພຣະວິນຍານບໍລິສຸດ ແລ້ວເຈົ້າກໍຈະກ່າວວ່າມັນແມ່ນພາລະກິດຂອງ

ພຣະວິນຍານບໍລິສຸດຄືກັນ; ຖ້າຄົນອື່ນກ່າວວ່າ ມັນເປັນພາລະກິດຂອງວິນຍານຊົ່ວຮ້າຍ ແລ້ວເຈົ້າກໍຈະສົງໄສເຊັ່ນກັນ ຫຼື ຍັງເວົ້າວ່າ ມັນແມ່ນພາລະກິດຂອງວິນຍານຊົ່ວຮ້າຍ. ເຈົ້າຮຽນແບບຄຳເວົ້າຂອງຄົນອື່ນຢູ່ເປັນປະຈຳ ແລະ ບໍ່ສາມາດຈຳແນກສິ່ງໃດດ້ວຍຕົວເຈົ້າເອງ ແລະ ເຈົ້າກໍບໍ່ສາມາດຄິດເພື່ອຕົວເອງ. ນີ້ແມ່ນຄົນທີ່ບໍ່ມີຈຸດຢືນ ເຊິ່ງບໍ່ສາມາດຈຳແນກຄວາມແຕກຕ່າງ ເຊິ່ງບຸກຄົນດັ່ງກ່າວເປັນຄົນເວດທະນາທີ່ບໍ່ມີຄ່າເລີຍ! ເຈົ້າຕ້ອງເວົ້າຕາມຄຳເວົ້າຂອງຄົນອື່ນຊໍ້າໆ: ໃນປັດຈຸບັນ ມີຄົນບອກວ່າ ນີ້ແມ່ນພາລະກິດຂອງພຣະວິນຍານບໍລິສຸດ ແຕ່ມີຄວາມເປັນໄປໄດ້ທີ່ມື້ໜຶ່ງ ຈະມີຄົນກ່າວວ່າ ມັນບໍ່ແມ່ນພາລະກິດຂອງພຣະວິນຍານບໍລິສຸດ ແລະ ມັນບໍ່ມີຫຍັງເລີຍ ນອກຈາກການກະທຳຂອງມະນຸດ ແຕ່ເຈົ້າກໍຍັງບໍ່ສາມາດເບິ່ງສິ່ງນີ້ອອກ ແລະ ເມື່ອເຈົ້າໄດ້ເຫັນຄົນອື່ນກ່າວມັນອອກມາ ເຈົ້າກໍຈະກ່າວໃນສິ່ງດຽວກັນ. ມັນເປັນພາລະກິດຂອງພຣະວິນຍານບໍລິສຸດຢ່າງແທ້ຈິງ ແຕ່ເຈົ້າຈະກ່າວວ່າ ມັນເປັນພາລະກິດຂອງມະນຸດ; ເຈົ້າບໍ່ໄດ້ກາຍມາເປັນໜຶ່ງໃນຄົນເຫຼົ່ານັ້ນທີ່ກ່າວໝິ່ນປະໝາດພາລະກິດຂອງພຣະວິນຍານບໍລິສຸດບໍ? ໃນສິ່ງນີ້ ເຈົ້າບໍ່ໄດ້ຕໍ່ຕ້ານພຣະເຈົ້າ ຍ້ອນເຈົ້າບໍ່ສາມາດຈຳແນກຄວາມແຕກຕ່າງໄດ້ບໍ? ໃຜຈະໄປຮູ້, ບາງເທື່ອ ມື້ໜຶ່ງ ຄົນໂງ່ບາງຄົນຈະປະກົດຂຶ້ນ ເຊິ່ງເປັນຄົນທີ່ກ່າວວ່າ "ນີ້ແມ່ນພາລະກິດຂອງວິນຍານຊົ່ວຮ້າຍ" ແລະ ເມື່ອເຈົ້າໄດ້ຍິນຄຳເວົ້າເຫຼົ່ານີ້ ເຈົ້າກໍຈະສູນເສຍຈຸດຢືນ ແລະ ອີກຄັ້ງ ເຈົ້າກໍຈະຖືກຄຳເວົ້າຂອງຄົນອື່ນຜູກມັດ. ທຸກຄັ້ງທີ່ມີບາງຄົນສ້າງຄວາມວຸ້ນວາຍຂຶ້ນ ເຈົ້າກໍຈະບໍ່ສາມາດຢືນໃນຈຸດຢືນຂອງຕົນເອງ ແລະ ມັນກໍຈະເປັນແບບນີ້ ຍ້ອນວ່າເຈົ້າບໍ່ມີຄວາມຈິງ. ການເຊື່ອໃນພຣະເຈົ້າ ແລະ ການສະແຫວງຫາຄວາມຮູ້ຂອງພຣະເຈົ້າບໍ່ແມ່ນບັນຫາທີ່ບໍ່ງ່າຍດາຍ. ພຽງແຕ່ເຕົ້າໂຮມກັນ ແລະ ຮັບຟັງຄຳເທດສະໜາບໍ່ສາມາດເຮັດໃຫ້ບັນລຸສິ່ງນັ້ນໄດ້ ແລະ ຄວາມຮັກຢ່າງຫຼົງໄຫຼຢ່າງດຽວບໍ່ສາມາດເຮັດໃຫ້ເຈົ້າສົມບູນໄດ້. ເຈົ້າຕ້ອງປະສົບກັບ ແລະ ຮູ້ຈັກ ແລະ ມີຫຼັກການໃນການກະທຳຂອງເຈົ້າ ແລະ ຮັບພາລະກິດຂອງພຣະວິນຍານບໍລິສຸດ. ເມື່ອເຈົ້າໄດ້ຜ່ານປະສົບການຫຼາຍຢ່າງ ເຈົ້າຈະສາມາດຈຳແນກຄວາມແຕກຕ່າງຫຼາຍຢ່າງ ເຊິ່ງເຈົ້າຈະສາມາດຈຳແນກລະຫວ່າງສິ່ງທີ່ດີ ແລະ ສິ່ງທີ່ຊົ່ວ, ລະຫວ່າງສິ່ງທີ່ທ່ຽງທຳ ແລະ ສິ່ງທີ່ຊົ່ວຮ້າຍ, ລະຫວ່າງສິ່ງທີ່ເປັນເນື້ອໜັງ ແລະ ເລືອດເນື້ອ ແລະ ສິ່ງທີ່ເປັນຄວາມຈິງ. ເຈົ້າຄວນສາມາດຈຳແນກລະຫວ່າງທຸກສິ່ງເຫຼົ່ານີ້ ແລະ ດ້ວຍການເຮັດແບບນີ້, ບໍ່ວ່າຈະຢູ່ໃນສະຖານະການໃດກໍຕາມ ເຈົ້າກໍຈະບໍ່ສູນເສຍຈຸດຢືນຈັກເທື່ອ. ນີ້ຈຶ່ງແມ່ນວຸດທິພາວະທີ່ແທ້ຈິງຂອງເຈົ້າ.

ການຮູ້ຈັກພາລະກິດຂອງພຣະເຈົ້າບໍ່ແມ່ນບັນຫາທີ່ງ່າຍ. ເຈົ້າຄວນມີມາດຕະຖານ ແລະ ຈຸດປະສົງໃນການສະແຫວງຫາຂອງເຈົ້າ, ເຈົ້າຄວນຮູ້ຈັກວິທີການສະແຫວງຫາຫົນທາງທີ່ແທ້ຈິງ ແລະ ວິທີການປະເມີນວ່າ ມັນເປັນຫົນທາງທີ່ແທ້ຈິງ ຫຼື ບໍ ແລະ ມັນເປັນພາລະກິດຂອງພຣະເຈົ້າ ຫຼື ບໍ. ແມ່ນຫຍັງຄືຫຼັກການພື້ນຖານທີ່ສຸດໃນການສະແຫວງຫາຫົນທາງທີ່ແທ້ຈິງ? ເຈົ້າຕ້ອງເບິ່ງວ່າ ມັນມີພາລະກິດຂອງພຣະວິນຍານບໍລິສຸດໃນລັກສະນະນີ້ ຫຼື ບໍ, ພຣະທຳເຫຼົ່ານີ້ແມ່ນການສະແດງເຖິງຄວາມຈິງ ຫຼື ບໍ, ເປັນພະຍານໃຫ້ກັບໃຜ ແລະ ມັນສາມາດນຳຫຍັງມາໃຫ້ເຈົ້າ. ການຈຳແນກລະຫວ່າງຫົນທາງທີ່ແທ້ຈິງ ແລະ ຫົນທາງທີ່ຈອມປອມຕ້ອງການຄວາມຮູ້ພື້ນຖານໃນຫຼາຍໆດ້ານ ເຊິ່ງສິ່ງທີ່ເປັນພື້ນຖານທີ່ສຸດຄື

ການສາມາດບອກວ່າ ມັນແມ່ນພາລະກິດຂອງພຣະວິນຍານບໍລິສຸດ ຫຼື ບໍ. ຍ້ອນແກ່ນແທ້ຂອງຄວາມເຊື່ອໃນພຣະເຈົ້າແມ່ນຄວາມເຊື່ອໃນພຣະວິນຍານຂອງພຣະເຈົ້າ ແລະ ແມ່ນແຕ່ຄວາມເຊື່ອໃນພຣະເຈົ້າໃນຮ່າງຂອງມະນຸດກໍເກີດຂຶ້ນ ຍ້ອນເນື້ອໜັງນີ້ເປັນຕົວຕົນຂອງພຣະວິນຍານຂອງພຣະເຈົ້າ ເຊິ່ງໝາຍຄວາມວ່າ ຄວາມເຊື່ອດັ່ງກ່າວກໍຍັງແມ່ນຄວາມເຊື່ອໃນພຣະວິນຍານ. ມີຄວາມແຕກຕ່າງລະຫວ່າງພຣະວິນຍານ ແລະ ເນື້ອໜັງ ແຕ່ຍ້ອນເນື້ອໜັງມາຈາກພຣະວິນຍານ ແລະ ພຣະທຳກາຍເປັນເນື້ອໜັງ, ສະນັ້ນ, ສິ່ງທີ່ມະນຸດເຊື່ອຍັງຄົງເປັນແກ່ນແທ້ໂດຍທຳມະຊາດຂອງພຣະເຈົ້າ. ດ້ວຍເຫດນັ້ນ, ໃນການຈຳແນກວ່າ ມັນແມ່ນຫົນທາງທີ່ແທ້ຈິງ ຫຼື ບໍ, ກ່ອນອື່ນໝົດ ເຈົ້າຕ້ອງເບິ່ງວ່າ ມີພາລະກິດຂອງພຣະວິນຍານບໍລິສຸດ ຫຼື ບໍ ແລ້ວຫຼັງຈາກນັ້ນ ເຈົ້າຕ້ອງເບິ່ງວ່າ ມີຄວາມຈິງໃນຫົນທາງນີ້ ຫຼື ບໍ. ຄວາມຈິງນີ້ແມ່ນຊີວິດຈິດໃຈຂອງຄວາມເປັນມະນຸດທີ່ປົກກະຕິ ເຊິ່ງເວົ້າໄດ້ວ່າ ມັນເປັນສິ່ງທີ່ຕ້ອງການຈາກມະນຸດ ເມື່ອພຣະເຈົ້າຊົງສ້າງເຂົາຕັ້ງແຕ່ຕອນເລີ່ມຕົ້ນ ໂດຍສະເພາະຄວາມເປັນມະນຸດທີ່ປົກກະຕິທັງໝົດ (ລວມທັງເຫດຄວາມຮູ້ສຶກຂອງມະນຸດ, ຄວາມເຂົ້າໃຈ, ສະຕິປັນຍາ ແລະ ຄວາມຮູ້ພື້ນຖານຂອງການເປັນມະນຸດ). ນັ້ນກໍຄື ເຈົ້າຕ້ອງເບິ່ງວ່າ ຫົນທາງນີ້ສາມາດນຳມະນຸດໄປສູ່ຊີວິດແຫ່ງຄວາມເປັນມະນຸດທີ່ປົກກະຕິ ຫຼື ບໍ, ຄວາມຈິງທີ່ກ່າວເຖິງນີ້ແມ່ນຈຳເປັນຕາມຄວາມເປັນຈິງແຫ່ງຄວາມເປັນມະນຸດທີ່ທຳມະດາ ຫຼື ບໍ, ຄວາມຈິງນີ້ມີປະໂຫຍດ ແລະ ເປັນຈິງ ຫຼື ບໍ ແລະ ມັນຖືກເວລາທີ່ສຸດ ຫຼື ບໍ. ຖ້າມີຄວາມຈິງ ມັນກໍຈະສາມາດນຳມະນຸດເຂົ້າສູ່ປະສົບການທີ່ປົກກະຕິ ແລະ ແທ້ຈິງ; ນອກຈາກນັ້ນມະນຸດຈະກາຍມາເປັນຄົນປົກກະຕິຫຼາຍຂຶ້ນ, ປະສາດສຳຜັດຂອງມະນຸດກາຍມາເປັນສິ່ງທີ່ສົມບູນຂຶ້ນຕື່ມ, ຊີວິດມະນຸດທີ່ເປັນເນື້ອໜັງ ແລະ ຊີວິດທາງຈິດວິນຍານກາຍມາເປັນສິ່ງທີ່ເປັນລະບົບລະບຽບຫຼາຍຍິ່ງຂຶ້ນ ແລະ ຄວາມຮູ້ສຶກຂອງມະນຸດກາຍມາເປັນສິ່ງທີ່ປົກກະຕິຫຼາຍຂຶ້ນ. ນີ້ຄືຫຼັກການທີສອງ. ຍັງມີອີກຫຼັກການໜຶ່ງ ເຊິ່ງກໍຄື ມະນຸດໄດ້ມີຄວາມຮູ້ທີ່ເພີ່ມຂຶ້ນ ຫຼື ບໍ, ການປະສົບກັບພາລະກິດ ແລະ ຄວາມຈິງດັ່ງກ່າວສາມາດດົນບັນດານຄວາມຮັກຂອງພຣະເຈົ້າໃນຕົວເຂົາ ຫຼື ບໍ ແລະ ໄດ້ນຳເຂົາໃຫ້ເຂົ້າໃກ້ຊິດກັບພຣະເຈົ້າຫຼາຍຍິ່ງຂຶ້ນ. ດ້ວຍວິທີນີ້ ມັນຈຶ່ງສາມາດປະເມີນໄດ້ວ່າ ມັນແມ່ນຫົນທາງທີ່ແທ້ຈິງ ຫຼື ບໍ່. ສິ່ງທີ່ເປັນພື້ນຖານທີ່ສຸດກໍຄື ຫົນທາງນີ້ເປັນຈິງຫຼາຍກວ່າສິ່ງທີ່ເໜືອທຳມະຊາດ ຫຼື ບໍ ແລະ ມັນສາມາດສະໜອງຊີວິດຂອງມະນຸດ ຫຼື ບໍ. ຖ້າມັນສອດຄ່ອງກັບຫຼັກການເຫຼົ່ານີ້ ກໍສາມາດສະຫຼຸບໄດ້ວ່າ ຫົນທາງນີ້ເປັນຫົນທາງທີ່ແທ້ຈິງ. ເຮົາກ່າວພຣະທຳເຫຼົ່ານີ້ ເພື່ອເຮັດໃຫ້ພວກເຈົ້າຍອມຮັບຫົນທາງອື່ນໆໃນປະສົບການອະນາຄົດຂອງພວກເຈົ້າ, ບໍ່ແມ່ນເປັນການທຳນາຍວ່າ ຈະມີພາລະກິດຂອງຍຸກໃໝ່ອີກຢ່າງໃນອະນາຄົດ. ເຮົາກ່າວພວກມັນ ເພື່ອພວກເຈົ້າອາດຈະແນ່ໃຈວ່າ ຫົນທາງໃນປັດຈຸບັນແມ່ນຫົນທາງທີ່ແທ້ຈິງ, ເພື່ອພວກເຈົ້າຈະບໍ່ໝັ້ນໃຈພຽງເຄິ່ງດຽວໃນຄວາມເຊື່ອຂອງພວກເຈົ້າກ່ຽວກັບພາລະກິດຂອງປັດຈຸບັນ ແລະ ບໍ່ສາມາດຮັບຮູ້ກ່ຽວກັບສິ່ງນັ້ນ. ຍັງມີອີກຫຼາຍຄົນ ທີ່ເຖິງວ່າຈະແນ່ໃຈ ແຕ່ກໍຍັງຕິດຕາມດ້ວຍຄວາມສັບສົນ; ຄວາມແນ່ໃຈດັ່ງກ່າວບໍ່ມີຫຼັກການໃນຕົວມັນ ແລະ ພວກມັນຕ້ອງຖືກກຳຈັດບໍ່ໄວກໍຊ້າ. ແມ່ນແຕ່ຄົນເຫຼົ່ານັ້ນ ທີ່ກະຕືລືລົ້ນຢ່າງພິເສດ ໃນການຕິດຕາມຂອງພວກເຂົາ ແມ່ນປະກອບດ້ວຍສາມສ່ວນທີ່ແນ່ໃຈ ແລະ ຫ້າສ່ວນທີ່ບໍ່ແນ່ໃຈ ເຊິ່ງ

ສະແດງວ່າ ພວກເຂົາບໍ່ມີພື້ນຖານ. ຍ້ອນຄວາມສາມາດຂອງພວກເຈົ້າຕໍ່າເກີນໄປ ແລະ ພື້ນຖານຂອງພວກເຈົ້າຕື້ນເກີນໄປ, ພວກເຈົ້າຈຶ່ງບໍ່ມີຄວາມເຂົ້າໃຈໃນການຈໍາແນກຄວາມແຕກຕ່າງ. ພຣະເຈົ້າບໍ່ເຮັດຊໍ້າພາລະກິດຂອງພຣະອົງ, ພຣະອົງບໍ່ປະຕິບັດພາລະກິດທີ່ບໍ່ເປັນຈິງ, ພຣະອົງບໍ່ກໍານົດເງື່ອນໄຂຈໍານວນຫຼາຍໃຫ້ກັບມະນຸດ ແລະ ພຣະອົງບໍ່ປະຕິບັດພາລະກິດທີ່ເກີນປະສາດສໍາຜັດຂອງມະນຸດ. ພາລະກິດທັງໝົດທີ່ພຣະອົງປະຕິບັດຢູ່ພາຍໃນຂອບເຂດປະສາດສໍາຜັດປົກກະຕິຂອງມະນຸດ ແລະ ບໍ່ເຮັດເກີນປະສາດສໍາຜັດຂອງຄວາມເປັນມະນຸດທີ່ປົກກະຕິ ແລະ ພາລະກິດຂອງພຣະອົງແມ່ນອີງຕາມເງື່ອນໄຂປົກກະຕິຂອງມະນຸດ. ຖ້າມັນແມ່ນພາລະກິດຂອງພຣະວິນຍານບໍລິສຸດ, ມະນຸດຈະຍິ່ງກາຍມາເປັນຄົນປົກກະຕິຫຼາຍຂຶ້ນ ແລະ ຄວາມເປັນມະນຸດຍິ່ງກາຍເປັນສິ່ງທີ່ປົກກະຕິຫຼາຍຂຶ້ນ. ມະນຸດມີຄວາມຮູ້ທີ່ເພີ່ມຂຶ້ນກ່ຽວກັບຈິດໃຈທີ່ເສື່ອມຊາມຂອງຊາຕານ ແລະ ທາດແທ້ຂອງມະນຸດ ແລະ ເຂົາມີຄວາມປາດຖະໜາຫາຄວາມຈິງທີ່ຍິ່ງໃຫຍ່ຂຶ້ນ. ນັ້ນກໍເພື່ອເວົ້າວ່າ ຊີວິດຂອງມະນຸດຈະເຕີບໃຫຍ່ເລື້ອຍໆ ແລະ ຈິດໃຈທີ່ເສື່ອມຊາມຂອງມະນຸດກໍສາມາດປ່ຽນແປງໄດ້ຫຼາຍຍິ່ງຂຶ້ນ ເຊິ່ງທຸກສິ່ງທີ່ເປັນຄວາມໝາຍຂອງພຣະເຈົ້າຈະກາຍມາເປັນຊີວິດຂອງມະນຸດ. ຖ້າຫົນທາງບໍ່ສາມາດເປີດເຜີຍສິ່ງເຫຼົ່ານັ້ນທີ່ເປັນທາດແທ້ຂອງມະນຸດ, ບໍ່ສາມາດປ່ຽນແປງຈິດໃຈຂອງມະນຸດ ແລະ ຍິ່ງໄປກວ່ານັ້ນ ບໍ່ສາມາດນໍາເຂົາມາຢູ່ຕໍ່ໜ້າພຣະເຈົ້າ ຫຼື ເຮັດໃຫ້ເຂົາເຂົ້າໃຈພຣະເຈົ້າຢ່າງແທ້ຈິງ ແລະ ຍັງເຮັດໃຫ້ຄວາມເປັນມະນຸດຂອງເຂົາຍິ່ງກາຍມາເປັນສິ່ງທີ່ຕ້ອຍຕໍ່າ ແລະ ປະສາດສໍາຜັດຂອງເຂົາຍິ່ງກາຍເປັນສິ່ງທີ່ບໍ່ປົກກະຕິ ເຊິ່ງດ້ວຍເຫດນີ້ ຫົນທາງນີ້ຈຶ່ງບໍ່ຄວນເປັນຫົນທາງທີ່ແທ້ຈິງ ແລະ ມັນອາດເປັນພາລະກິດຂອງວິນຍານຊົ່ວຮ້າຍ ຫຼື ວິທີທາງເກົ່າໆ. ຖ້າຈະເວົ້າໃຫ້ສັ້ນໆກໍຄືມັນບໍ່ສາມາດເປັນພາລະກິດໃນປັດຈຸບັນຂອງພຣະວິນຍານບໍລິສຸດ. ພວກເຈົ້າເຊື່ອໃນພຣະເຈົ້າໃນເວລາຫຼາຍປີຜ່ານມາ ແຕ່ພວກເຈົ້າບໍ່ມີຄວາມສະດຸດໃຈຕໍ່ຫຼັກການໃນການຈໍາແນກຄວາມແຕກຕ່າງລະຫວ່າງຫົນທາງທີ່ແທ້ຈິງ ແລະ ຫົນທາງທີ່ຜິດ ຫຼື ການສະແຫວງຫາຫົນທາງທີ່ແທ້ຈິງ. ຄົນສ່ວນໃຫຍ່ບໍ່ສົນໃຈໃນບັນຫາເຫຼົ່ານີ້ເລີຍ; ພວກເຂົາພຽງແຕ່ໄປຕາມທາງທີ່ຄົນສ່ວນຫຼາຍໄປ ແລະ ເວົ້າຕາມສິ່ງທີ່ຄົນສ່ວນຫຼາຍເວົ້າ. ຄົນແບບນີ້ສະແຫວງຫາຫົນທາງທີ່ແທ້ຈິງໄດ້ແນວໃດ? ຄົນດັ່ງກ່າວຈະສາມາດພົບຫົນທາງທີ່ແທ້ຈິງໄດ້ແນວໃດ? ຖ້າເຈົ້າເຂົ້າໃຈຫຼັກການທີ່ສໍາຄັນເຫຼົ່ານີ້ ເຈົ້າກໍຈະບໍ່ຖືກຫຼອກຫຼວງ ບໍ່ວ່າຈະມີສິ່ງໃດເກີດຂຶ້ນກໍຕາມ. ໃນປັດຈຸບັນມັນສໍາຄັນທີ່ມະນຸດຈະສາມາດຈໍາແນກຄວາມແຕກຕ່າງ; ນີ້ຄືສິ່ງທີ່ຄວາມເປັນມະນຸດໂດຍປົກກະຕິຄວນມີ ແລະ ສິ່ງທີ່ມະນຸດຕ້ອງມີໃນປະສົບການຂອງເຂົາ. ເຖິງວ່າໃນປັດຈຸບັນ ຖ້າມະນຸດຍັງບໍ່ສາມາດຈໍາແນກຫຍັງໃນການຕິດຕາມຂອງເຂົາ ແລະ ປະສາດສໍາຜັດຂອງມະນຸດຍັງບໍ່ທັນເຕີບໃຫຍ່, ມະນຸດກໍຈະໂງ່ຈ້າຫຼາຍ ແລະ ການສະແຫວງຫາຂອງເຂົາກໍຈະຜິດພາດ ແລະ ຜິດພ້ຽນ. ການສະແຫວງຫາຂອງເຈົ້າໃນປັດຈຸບັນແມ່ນບໍ່ມີການຈໍາແນກຄວາມແຕກຕ່າງແມ່ນແຕ່ໜ້ອຍດຽວ ແລະ ໃນຂະນະທີ່ມັນເປັນຈິງຄືກັບທີ່ເຈົ້າເວົ້າວ່າ ເຈົ້າໄດ້ພົບຫົນທາງທີ່ແທ້ຈິງແລ້ວ ແຕ່ເຈົ້າໄດ້ຮັບມັນແລ້ວບໍ? ເຈົ້າສາມາດຈໍາແນກສິ່ງໃດກໍໄດ້ບໍ? ແມ່ນຫຍັງຄືແກ່ນແທ້ຂອງຫົນທາງທີ່ແທ້ຈິງ? ໃນຫົນທາງທີ່ແທ້ຈິງ ເຈົ້າໄດ້ຮັບເອົາຫົນທາງທີ່ແທ້ຈິງ, ເຈົ້າບໍ່ໄດ້ຮັບສິ່ງທີ່ເປັນຄວາມຈິງ ເຊິ່ງເວົ້າໄດ້ວ່າ ເຈົ້າບໍ່ໄດ້ເຮັດສໍາເລັດຕາມ

ສິ່ງທີ່ພຣະເຈົ້າຕ້ອງການຈາກເຈົ້າ ແລະ ດ້ວຍເຫດນີ້ ຄວາມເສື່ອມຊາມຂອງເຈົ້າຈຶ່ງບໍ່ມີການປ່ຽນແປງ. ຖ້າເຈົ້າສືບຕໍ່ສະແຫວງຫາດ້ວຍຫົນທາງນີ້, ເຈົ້າຈະຖືກກຳຈັດໃນທີ່ສຸດ. ເມື່ອໄດ້ຕິດຕາມຈົນຮອດປັດຈຸບັນ, ເຈົ້າຄວນແນ່ໃຈວ່າ ຫົນທາງທີ່ເຈົ້າໄດ້ເລືອກເປັນຫົນທາງທີ່ຖືກຕ້ອງ ແລະ ບໍ່ຄວນສົງໄສອີກ. ຫຼາຍຄົນມັກບໍ່ແນ່ໃຈຢູ່ຕະຫຼອດ ແລະ ຈະຢຸດສະແຫວງຫາຄວາມຈິງ ຍ້ອນບັນຫາເລັກນ້ອຍບາງຢ່າງ. ຄົນດັ່ງກ່າວບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ, ພວກເຂົາເປັນຄົນທີ່ຕິດຕາມພຣະເຈົ້າດ້ວຍຄວາມສັບສົນ. ຜູ້ຄົນທີ່ບໍ່ຮູ້ຈັກພາລະກິດຂອງພຣະເຈົ້າບໍ່ສາມາດເປັນຜູ້ໃກ້ຊິດຂອງພຣະອົງໄດ້ ຫຼື ເປັນພະຍານໃຫ້ກັບພຣະອົງ. ເຮົາແນະນຳຄົນເຫຼົ່ານັ້ນທີ່ສະແຫວງຫາພຽງແຕ່ພຣະພອນ ແລະ ພຽງແຕ່ສະແຫວງຫາສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ມີຕົວຕົນ ໃຫ້ພາກັນສະແຫວງຫາຄວາມຈິງໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້ ເພື່ອຊີວິດຂອງພວກເຂົາອາດຈະມີຄວາມໝາຍ. ຢ່າຫຼອກຕົວເອງອີກເລີຍ!

# ຄວາມແຕກຕ່າງລະຫວ່າງ ພັນທະກິດຂອງພຣະເຈົ້າຜູ້ບັງເກີດ ເປັນມະນຸດ ແລະ ໜ້າທີ່ຂອງມະນຸດ

ພວກເຈົ້າຕ້ອງມາຮູ້ຈັກນິມິດແຫ່ງພາລະກິດຂອງພຣະເຈົ້າ ແລະ ເຂົ້າໃຈທິດທາງໂດຍທົ່ວໄປແຫ່ງພາລະກິດຂອງພຣະອົງ. ນີ້ແມ່ນການເຂົ້າສູ່ທີ່ເປັນບວກ. ເມື່ອເຈົ້າຊ່ຽວຊານດ້ານຄວາມຈິງຂອງນິມິດຢ່າງແທ້ຈິງ, ການເຂົ້າສູ່ຂອງເຈົ້າກໍຈະປອດໄພ; ບໍ່ວ່າພາລະກິດຂອງພຣະອົງຈະປ່ຽນແປງໄປແບບໃດກໍຕາມ, ເຈົ້າກໍຈະຍັງໝັ້ນຄົງໃນໃຈຂອງເຈົ້າ, ມີຄວາມຊັດເຈນກ່ຽວກັບນິມິດ ແລະ ມີເປົ້າໝາຍໃນການເຂົ້າສູ່ ແລະ ການສະແຫວງຫາຂອງເຈົ້າ. ດ້ວຍວິທີນີ້, ປະສົບການ ແລະ ຄວາມຮູ້ທັງໝົດໃນຕົວເຈົ້າຈະເລິກເຊິ່ງ ແລະ ລະອຽດຫຼາຍຂຶ້ນ. ເມື່ອເຈົ້າໄດ້ເຂົ້າໃຈພາບລວມທັງໝົດທີ່ໃຫຍ່ກວ່າເກົ່າ, ເຈົ້າຈະບໍ່ທົນທຸກກັບການສູນເສຍໃນຊີວິດ ແລະ ເຈົ້າຈະບໍ່ຫຼົງທາງ. ຖ້າເຈົ້າບໍ່ມາຮູ້ຈັກກັບຂັ້ນຕອນຂອງພາລະກິດເຫຼົ່ານີ້, ເຈົ້າຈະທົນທຸກກັບການສູນເສຍໃນແຕ່ລະຂັ້ນຕອນ ແລະ ເຈົ້າຈະໃຊ້ເວລາຫຼາຍກວ່າສອງສາມມື້ເພື່ອພິກປີ້ນສິ່ງຕ່າງໆ ແລະ ເຈົ້າຈະບໍ່ສາມາດຍ່າງຢູ່ເສັ້ນທາງທີ່ຖືກຕ້ອງໄດ້ພຽງພາຍໃນສອງສາມອາທິດ. ນີ້ຈະບໍ່ຫ່ວງດຶງເຈົ້າໄວ້ບໍ? ມີຫຼາຍສິ່ງທີ່ຂວາງທາງຂອງການເຂົ້າສູ່ທີ່ເປັນບວກ ແລະ ການປະຕິບັດທີ່ພວກເຈົ້າຕ້ອງມີຄວາມຊ່ຽວຊານ. ສ່ວນນິມິດແຫ່ງພາລະກິດຂອງພຣະເຈົ້າ, ເຈົ້າຕ້ອງເຂົ້າໃຈຈຸດຕ່າງໆລຸ່ມນີ້: ຄວາມສຳຄັນຂອງພາລະກິດໃນການເອົາຊະນະຂອງພຣະອົງ, ເສັ້ນທາງສູ່ຄວາມສົມບູນໃນອະນາຄົດ, ສິ່ງທີ່ຕ້ອງບັນລຸຜົນຜ່ານການປະສົບກັບການທົດສອບ ແລະ ຄວາມຍາກລຳບາກ, ຄວາມສຳຄັນຂອງການພິພາກສາ ແລະ ການຂ້ຽນຕີ, ຫຼັກການທີ່ຢູ່ເບື້ອງຫຼັງພາລະກິດຂອງພຣະວິນຍານບໍລິສຸດ ແລະ ຫຼັກການທີ່ຢູ່ເບື້ອງຫຼັງຄວາມສົມບູນ ແລະ ການເອົາຊະນະ. ທັງໝົດນີ້ຄືຄວາມຈິງຂອງນິມິດ. ສ່ວນທີ່ເຫຼືອຄືພາລະກິດຂອງສາມຂັ້ນຕອນໃນຍຸກແຫ່ງພຣະບັນຍັດ, ຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງອານາຈັກ ພ້ອມດ້ວຍຄຳພະຍານໃນອະນາຄົດ. ສິ່ງເຫຼົ່ານີ້ຄືຄວາມຈິງກ່ຽວກັບນິມິດເຊັ່ນກັນ ເຊິ່ງສິ່ງເຫຼົ່ານີ້ເປັນສິ່ງທີ່ເປັນພື້ນຖານທີ່ສຸດ ແລະ ເປັນສິ່ງທີ່ສຳຄັນທີ່ສຸດ. ໃນປັດຈຸບັນນີ້, ມີຫຼາຍສິ່ງທີ່ພວກເຈົ້າຄວນເຂົ້າຫາ ແລະ ປະຕິບັດ ແລະ ໃນປັດຈຸບັນກໍມີຫຼາຍຂັ້ນຕອນ ແລະ ລະອຽດຫຼາຍຂຶ້ນ. ຖ້າເຈົ້າບໍ່ມີຄວາມຮູ້ກ່ຽວກັບຄວາມຈິງເຫຼົ່ານີ້, ນີ້ກໍພິສູດໃຫ້ເຫັນວ່າ ເຈົ້າຍັງບໍ່ທັນເຂົ້າສູ່ຢ່າງເຖິງຖອງເທື່ອ. ສ່ວນໃຫຍ່ ຄວາມຮູ້ຂອງມະນຸດກ່ຽວກັບຄວາມຈິງແມ່ນຕື້ນຫຼາຍ; ພວກເຂົາບໍ່ສາມາດນຳໃຊ້ພື້ນຖານຄວາມຈິງບາງຢ່າງເຂົ້າໃນການປະຕິບັດ ແລະ ບໍ່ຮູ້ວິທີຈັດການແມ່ນແຕ່ບັນຫາເລັກນ້ອຍ. ເຫດຜົນທີ່ຜູ້ຄົນບໍ່ສາມາດປະຕິບັດຄວາມຈິງກໍຍ້ອນອຸປະນິໄສຕໍ່ຕ້ານຂອງພວກເຂົາ ແລະ ຍ້ອນຄວາມຮູ້ຂອງພວກເຂົາກ່ຽວກັບພາລະກິດໃນມື້ນີ້ແມ່ນຜິວເຜີນເກີນໄປ ແລະ ເປັນຄວາມຮູ້ທາງດ້ານດຽວ. ສະນັ້ນ, ບໍ່ແມ່ນເລື່ອງງ່າຍສຳລັບຜູ້ຄົນທີ່ຈະຖືກເຮັດໃຫ້ສົມບູນ. ເຈົ້າຕໍ່ຕ້ານຫຼາຍເກີນໄປ ແລະ ເຈົ້າຍັງມີນິໄສແບບເກົ່າຫຼາຍ; ເຈົ້າບໍ່ສາມາດຢືນຢູ່ຝ່າຍຄວາມຈິງໄດ້ ແລະ ເຈົ້າກໍບໍ່ສາມາດປະຕິບັດໄດ້ແມ່ນແຕ່ຄວາມຈິງທີ່ຊັດເຈນໃນຕົວທີ່ສຸດແລ້ວ. ຜູ້ຄົນດັ່ງກ່າວບໍ່ສາມາດຮັບການຊ່ວຍໃຫ້ລອດພົ້ນໄດ້ ແລະ

ແມ່ນຜູ້ທີ່ບໍ່ທັນຖືກເອົາຊະນະໄດ້. ຖ້າການເຂົ້າສູ່ຂອງເຈົ້າບໍ່ມີລາຍລະອຽດ ຫຼື ມີຈຸດປະສົງ, ຄວາມຈະເລີນເຕີບໂຕຂອງເຈົ້າກໍຈະຊັກຊ້າ. ຖ້າການເຂົ້າສູ່ຂອງເຈົ້າບໍ່ມີຄວາມເປັນຈິງແມ່ນແຕ່ເລັກນ້ອຍ, ການສະແຫວງຫາຂອງເຈົ້າກໍຈະບໍ່ມີປະໂຫຍດຫຍັງ. ຖ້າເຈົ້າບໍ່ຮູ້ແກ່ນແທ້ຂອງຄວາມຈິງ, ເຈົ້າຈະຍັງບໍ່ປ່ຽນແປງ. ຄວາມຈະເລີນເຕີບໂຕຂອງຊີວິດມະນຸດ ແລະ ການປ່ຽນແປງໃນດ້ານຈິດໃຈຂອງເຂົາຈະໄດ້ບັນລຸຜົນ ໂດຍການເຂົ້າສູ່ຄວາມເປັນຈິງ ແລະ ຍິ່ງໄປກວ່ານັ້ນ ແມ່ນໂດຍຜ່ານການເຂົ້າສູ່ປະສົບການຢ່າງລະອຽດ. ຖ້າເຈົ້າມີປະສົບການຢ່າງລະອຽດລະຫວ່າງການເຂົ້າສູ່ຂອງເຈົ້າ ແລະ ເຈົ້າມີຄວາມຮູ້ ແລະ ການເຂົ້າສູ່ຕົວຈິງ, ຈິດໃຈຂອງເຈົ້າຈະປ່ຽນແປງໂດຍທັນທີ. ເຖິງແມ່ນວ່າ ໃນປັດຈຸບັນເຈົ້າຍັງບໍ່ຮູ້ແຈ້ງໃນການປະຕິບັດພໍປານໃດ ແຕ່ຢ່າງໜ້ອຍສຸດ ເຈົ້າຕ້ອງຮູ້ແຈ້ງກ່ຽວກັບນິມິດຂອງພາລະກິດຂອງພຣະເຈົ້າ. ຖ້າບໍ່ດັ່ງນັ້ນ, ເຈົ້າຈະບໍ່ສາມາດເຂົ້າສູ່ໄດ້; ການເຂົ້າສູ່ຈະເປັນໄປໄດ້ເມື່ອເຈົ້າມີຄວາມຮູ້ກ່ຽວກັບຄວາມຈິງນັ້ນກ່ອນ. ຖ້າພຣະວິນຍານບໍລິສຸດໃຫ້ຄວາມສະຫວ່າງແກ່ເຈົ້າໃນປະສົບການຂອງເຈົ້າ, ເຈົ້າຈຶ່ງຈະໄດ້ຮັບຄວາມເຂົ້າໃຈກ່ຽວກັບຄວາມຈິງ ແລະ ການເຂົ້າສູ່ຢ່າງເລິກເຊິ່ງ. ພວກເຈົ້າຕ້ອງມາຮູ້ຈັກພາລະກິດຂອງພຣະເຈົ້າ.

ໃນຕອນຕົ້ນ, ຫຼັງຈາກການນິລະມິດສ້າງມະນຸດຊາດ, ຄົນອິດສະຣາເອນຄືຜູ້ທີ່ໄດ້ເຮັດໜ້າທີ່ພື້ນຖານໃນພາລະກິດຂອງພຣະເຈົ້າ. ທົ່ວອິດສະຣາເອນເປັນຖານສຳລັບພາລະກິດຂອງພຣະເຢໂຮວາເທິງແຜ່ນດິນໂລກ. ພາລະກິດຂອງພຣະເຢໂຮວາແມ່ນເພື່ອນຳພາ ແລະ ລ້ຽງດູມະນຸດໂດຍກົງໂດຍການສ້າງຕັ້ງພຣະບັນຍັດ ເພື່ອໃຫ້ມະນຸດສາມາດມີຊີວິດປົກກະຕິ ແລະ ບູຊາພຣະເຢໂຮວາໃນລັກສະນະແບບທົ່ວໄປຢູ່ໃນແຜ່ນດິນໂລກ. ພຣະເຈົ້າໃນຍຸກພຣະບັນຍັດບໍ່ສາມາດເບິ່ງເຫັນ ຫຼື ສຳຜັດໄດ້ໂດຍມະນຸດ. ເພາະສິ່ງທີ່ພຣະອົງເຮັດແມ່ນພຽງແຕ່ນຳພາຜູ້ຄົນຕົ້ນເດີມສຸດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ, ສັ່ງສອນ ແລະ ລ້ຽງດູພວກເຂົາ, ພຣະທຳຂອງພຣະອົງປະກອບມີພຽງແຕ່ຂໍ້ບັນຍັດ, ກົດເກນ ແລະ ຄວາມຮູ້ທົ່ວໄປກ່ຽວກັບພຶດຕິກຳຂອງມະນຸດ ແລະ ບໍ່ໄດ້ຈັດຄວາມຈິງກ່ຽວກັບຊີວິດໃຫ້ພວກເຂົາ. ຄົນອິດສະຣາເອນທີ່ຢູ່ພາຍໃຕ້ການນຳພາຂອງພຣະອົງບໍ່ໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງເລິກເຊິ່ງ. ພາລະກິດຂອງພຣະອົງກ່ຽວກັບກົດບັນຍັດແມ່ນພຽງຂັ້ນຕອນທຳອິດໃນພາລະກິດຂອງຄວາມລອດພົ້ນ ເຊິ່ງເປັນຈຸດເລີ່ມຕົ້ນໃນພາລະກິດຂອງຄວາມລອດພົ້ນ ແລະ ບໍ່ໄດ້ກ່ຽວຂ້ອງກັບການປ່ຽນແປງໃນຊີວິດ-ອຸປະນິໄສຂອງມະນຸດເລີຍ. ເພາະສະນັ້ນ ໃນເບື້ອງຕົ້ນຂອງພາລະກິດແຫ່ງຄວາມລອດພົ້ນພຣະອົງບໍ່ຈຳເປັນຕ້ອງຮັບເອົາເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງໃນດິນແດນອິດສະຣາເອນ. ນີ້ຄືເຫດຜົນທີ່ພຣະອົງຕ້ອງການມີວິທີການ ເຊິ່ງນັ້ນກໍຄື ເຄື່ອງມືເພື່ອນຳໃຊ້ໃນການພົວພັນກັບມະນຸດ. ສະນັ້ນ, ຈຶ່ງເກີດມີຜູ້ຄົນໃນທ່າມກາງສິ່ງມີຊີວິດທີ່ຖືກສ້າງຂຶ້ນທີ່ເວົ້າ ແລະ ປະຕິບັດພາລະກິດຕາງໜ້າພຣະເຢໂຮວາ ເຊິ່ງນັ້ນຄືວິທີທີ່ບຸດຊາຍຂອງມະນຸດ ແລະ ສາສະດາທັງຫຼາຍໄດ້ມາກະທຳພາລະກິດທ່າມກາງມະນຸດ. ບຸດຊາຍຂອງມະນຸດໄດ້ປະຕິບັດພາລະກິດທ່າມກາງມະນຸດໂດຍຕາງໜ້າພຣະເຢໂຮວາ. ການທີ່ຖືກພຣະເຢໂຮວາເອີ້ນວ່າ "ບຸດຊາຍຂອງມະນຸດ" ໝາຍຄວາມວ່າ ຜູ້ຄົນດັ່ງກ່າວຕັ້ງຂໍ້ບັນຍັດແທນພຣະເຢໂຮວາ. ພວກເຂົາຍັງເປັນມະຫາປະໂລຫິດທ່າມກາງຜູ້ຄົນຂອງອິດສະຣາເອນ, ມະຫາ

ປະໂລຫິດທີ່ຖືກເບິ່ງແຍງ ແລະ ປົກປ້ອງໂດຍພຣະເຢໂຮວາ ແລະ ເປັນຜູ້ທີ່ຖືກພຣະວິນຍານຂອງພຣະເຢໂຮວາເຮັດພາລະກິດໃນຕົວ; ພວກເຂົາເປັນຜູ້ນໍາໃນທ່າມກາງຜູ້ຄົນ ແລະ ຮັບໃຊ້ພຣະເຢໂຮວາໂດຍກົງ. ໃນທາງກົງກັນຂ້າມ, ສາສະດາແມ່ນຜູ້ອຸທິດຕົນເພື່ອເວົ້າແທນພຣະເຢໂຮວາຕໍ່ຜູ້ຄົນທົ່ວແຜ່ນດິນ ແລະ ຕໍ່ທຸກຊົນເຜົ່າ. ພວກເຂົາຍັງໄດ້ທໍານາຍພາລະກິດຂອງພຣະເຢໂຮວາ. ບໍ່ວ່າຈະເປັນບຸດຊາຍຂອງມະນຸດ ຫຼື ສາສະດາ, ທຸກຄົນແມ່ນຖືກຍົກສູງໂດຍພຣະວິນຍານຂອງພຣະເຢໂຮວາເອງ ແລະ ມີພາລະກິດຂອງພຣະເຢໂຮວາສະຖິດໃນພວກເຂົາ. ໃນທ່າມກາງຜູ້ຄົນ, ພວກເຂົາເປັນຄົນທີ່ເປັນຕົວແທນໃຫ້ກັບ ພຣະເຢໂຮວາໂດຍກົງ; ພວກເຂົາປະຕິບັດພາລະກິດ ເພາະວ່າ ພວກເຂົາຖືກຍົກສູງໂດຍພຣະເຢໂຮວາ ແລະ ບໍ່ແມ່ນຍ້ອນວ່າ ພວກເຂົາເປັນເນື້ອໜັງທີ່ໄດ້ບັງເກີດຈາກພຣະວິນຍານບໍລິສຸດ. ດັ່ງນັ້ນ, ເຖິງແມ່ນວ່າ ພວກເຂົາຈະຄືກັນໃນການເວົ້າ ແລະ ການປະຕິບັດພາລະກິດໃນນາມຂອງພຣະເຈົ້າ, ບຸດຊາຍມະນຸດ ແລະ ສາສະດາເຫຼົ່ານັ້ນທີ່ຢູ່ໃນຍຸກແຫ່ງພຣະບັນຍັດບໍ່ແມ່ນເນື້ອໜັງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ. ພາລະກິດຂອງພຣະເຈົ້າໃນຍຸກແຫ່ງພຣະຄຸນ ແລະ ຍຸກສຸດທ້າຍແມ່ນກົງກັນຂ້າມກັນຢ່າງຊັດເຈນ ເພາະວ່າ ພາລະກິດຂອງຄວາມລອດພົ້ນ ແລະ ການພິພາກສາມະນຸດແມ່ນປະຕິບັດໂດຍພຣະເຈົ້າຜູ້ບັງເກີດເປັນມະນຸດເອງ ແລະ ເພາະສະນັ້ນ ຈຶ່ງບໍ່ຈໍາເປັນຕ້ອງຍົກສູງອີກຄັ້ງ ເພື່ອໃຫ້ສາສະດາ ແລະ ບຸດຊາຍຂອງມະນຸດປະຕິບັດພາລະກິດໃນນາມຂອງພຣະອົງ. ໃນສາຍຕາຂອງມະນຸດແມ່ນບໍ່ມີຄວາມແຕກຕ່າງທີ່ສໍາຄັນລະຫວ່າງແກ່ນແທ້ ແລະ ວິທີການປະຕິບັດພາລະກິດຂອງພວກເຂົາ. ຍ້ອນສາເຫດນີ້ ຜູ້ຄົນຈຶ່ງສັບສົນຢູ່ສະເໝີ ລະຫວ່າງພາລະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ ກັບພາລະກິດຂອງສາສະດາ ແລະ ບຸດຊາຍຂອງມະນຸດ. ຮູບລັກສະນະຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ ໂດຍພື້ນຖານແລ້ວ ແມ່ນຄືກັນກັບ ສາສະດາ ແລະ ບຸດຊາຍຂອງມະນຸດ. ແລ້ວພຣະເຈົ້າຜູ້ບັງເກີດເປັນມະນຸດຍິ່ງເປັນຄົນປົກກະຕິ ແລະ ເປັນຄວາມຈິງຫຼາຍກວ່າຜູ້ປະກາດພຣະທໍານັ້ນອີກ. ດ້ວຍເຫດນີ້ ມະນຸດຈຶ່ງບໍ່ສາມາດເບິ່ງອອກເຖິງຄວາມແຕກຕ່າງລະຫວ່າງພວກເຂົາ. ມະນຸດໃສ່ໃຈແຕ່ຮູບລັກສະນະ ໂດຍບໍ່ຮູ້ເລີຍວ່າ ທັງສອງບໍ່ມີຄວາມແຕກຕ່າງກັນຫຼາຍ ເຖິງວ່າ ທັງສອງຈະຄ້າຍຄືກັນໃນການເຮັດພາລະກິດ ແລະ ໃນການເວົ້າ, ມີຄວາມແຕກຕ່າງທີ່ສໍາຄັນລະຫວ່າງພວກເຂົາ. ເນື່ອງຈາກວ່າ ຄວາມສາມາດຂອງມະນຸດໃນການຈໍາແນກສິ່ງຕ່າງໆແມ່ນຕໍ່າຫຼາຍ, ເຂົາຈຶ່ງບໍ່ສາມາດຈໍາແນກບັນຫາພື້ນຖານໄດ້ ແລ້ວແຮງໄກທີ່ຈະເປັນສິ່ງທີ່ສັບຊ້ອນ. ເມື່ອສາສະດາ ແລະ ຜູ້ຄົນທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດ ໄດ້ເວົ້າ ແລະ ເຮັດພາລະກິດ, ນີ້ກໍເພື່ອປະຕິບັດໜ້າທີ່ຂອງມະນຸດ, ເພື່ອຮັບໃຊ້ໜ້າທີ່ຂອງສິ່ງມີຊີວິດທີ່ຖືກສ້າງຂຶ້ນ ແລະ ມັນແມ່ນບາງສິ່ງທີ່ມະນຸດຄວນເຮັດ. ຢ່າງໃດກໍຕາມ, ພຣະທໍາ ແລະ ພາລະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດແມ່ນເພື່ອດໍາເນີນພັນທະກິດຂອງພຣະອົງ. ເຖິງແມ່ນວ່າ ຮູບຮ່າງພາຍນອກຂອງພຣະອົງຈະເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນ, ພາລະກິດຂອງພຣະອົງກໍບໍ່ແມ່ນເພື່ອເຮັດໜ້າທີ່ຂອງພຣະອົງ ແຕ່ແມ່ນເພື່ອພັນທະກິດຂອງພຣະອົງ. ຄໍາວ່າ "ໜ້າທີ່" ແມ່ນໃຊ້ກັບສິ່ງມີຊີວິດທີ່ຖືກສ້າງຂຶ້ນ ໃນຂະນະທີ່ຄໍາວ່າ "ພັນທະກິດ" ແມ່ນໃຊ້ກັບເນື້ອໜັງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ. ທັງສອງຢ່າງແມ່ນມີຄວາມແຕກຕ່າງທີ່ສໍາຄັນ; ທັງສອງຢ່າງບໍ່ສາມາດນໍາໃຊ້ແທນ

ກັນໄດ້. ພາລະກິດຂອງມະນຸດແມ່ນເພື່ອປະຕິບັດໜ້າທີ່ຂອງພວກເຂົາເທົ່ານັ້ນ ໃນຂະນະທີ່ພາລະກິດຂອງພຣະເຈົ້າແມ່ນເພື່ອຄຸ້ມຄອງ ແລະ ດຳເນີນພັນທະກິດຂອງພຣະອົງ. ດັ່ງນັ້ນ, ເຖິງແມ່ນມີສາວົກຫຼາຍຄົນທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດ ແລະ ມີສາສະດາຫຼາຍຄົນທີ່ມີພຣະອົງສະຖິດຢູ່ໃນພວກເຂົາ, ພາລະກິດ ແລະ ຄຳເວົ້າຂອງພວກເຂົາແມ່ນພຽງເພື່ອປະຕິບັດໜ້າທີ່ຂອງພວກເຂົາໃນນາມເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນເທົ່ານັ້ນ. ການທຳນາຍຂອງພວກເຂົາອາດຈະເກີນແນວທາງແຫ່ງຊີວິດທີ່ກ່າວໂດຍພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ແມ່ນແຕ່ຄວາມເປັນມະນຸດຂອງພວກເຂົາອາດພົ້ນເດັ່ນກວ່າພຣະເຈົ້າຜູ້ບັງເກີດເປັນມະນຸດ ແຕ່ພວກເຂົາແມ່ນຍັງເຮັດໜ້າທີ່ຂອງພວກເຂົາ ແລະ ບໍ່ໄດ້ປະຕິບັດພັນທະກິດ. ໜ້າທີ່ຂອງມະນຸດໝາຍເຖິງວຽກງານຂອງມະນຸດ; ມັນເປັນສິ່ງທີ່ມະນຸດສາມາດໄດ້ຮັບ. ຢ່າງໃດກໍຕາມ, ພັນທະກິດທີ່ດຳເນີນໂດຍພຣະເຈົ້າຜູ້ບັງເກີດເປັນມະນຸດແມ່ນກ່ຽວຂ້ອງກັບການຄຸ້ມຄອງຂອງພຣະອົງ ແລະ ມະນຸດບໍ່ສາມາດໄດ້ຮັບສິ່ງນີ້ໄດ້. ບໍ່ວ່າພຣະເຈົ້າຜູ້ບັງເກີດເປັນມະນຸດຈະກ່າວ, ເຮັດພາລະກິດ ຫຼື ສະແດງເຖິງຄວາມມະຫັດສະຈັນ, ພຣະອົງແມ່ນກະທຳພາລະກິດອັນປະເສີດຢູ່ທ່າມກາງການຄຸ້ມຄອງຂອງພຣະອົງ ແລະ ມະນຸດບໍ່ສາມາດເຮັດພາລະກິດດັ່ງກ່າວແທນພຣະອົງໄດ້. ພາລະກິດຂອງມະນຸດແມ່ນເພື່ອປະຕິບັດໜ້າທີ່ຂອງພວກເຂົາໃນຖານະທີ່ເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນເທົ່ານັ້ນຢູ່ໃນຂັ້ນຕອນໃດໜຶ່ງຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ. ຖ້າຂາດການຄຸ້ມຄອງຂອງພຣະເຈົ້າ, ນັ້ນກໍຄື ຖ້າພັນທະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດສູນເສຍໄປ, ໜ້າທີ່ຂອງສິ່ງມີຊີວິດທີ່ຖືກສ້າງຂຶ້ນກໍຈະສູນເສຍໄປ. ພາລະກິດຂອງພຣະເຈົ້າໃນການດຳເນີນພັນທະກິດຂອງພຣະອົງແມ່ນເພື່ອຄຸ້ມຄອງມະນຸດ ໃນຂະນະການປະຕິບັດໜ້າທີ່ຂອງມະນຸດແມ່ນການເຮັດພັນທະຂອງຕົວເອງໃຫ້ສຳເລັດ ເພື່ອຕອບສະໜອງຄວາມຕ້ອງການຂອງພຣະຜູ້ສ້າງ ແລະ ບໍ່ສາມາດຖືວ່າເປັນການດຳເນີນພັນທະກິດຂອງຄົນເຮົາ. ສຳລັບທາດແທ້ຂອງພຣະເຈົ້າທີ່ມີຢູ່ໃນຕົວ ກໍຄື ພຣະວິນຍານຂອງພຣະອົງ, ພາລະກິດຂອງພຣະເຈົ້າກໍຄືການຄຸ້ມຄອງຂອງພຣະອົງ, ແຕ່ສຳລັບພຣະເຈົ້າຜູ້ບັງເກີດເປັນມະນຸດ ຜູ້ທີ່ມີຮູບຮ່າງພາຍນອກຂອງສິ່ງມີຊີວິດທີ່ຖືກສ້າງຂຶ້ນ, ພາລະກິດຂອງພຣະອົງຄືການດຳເນີນພັນທະກິດຂອງພຣະອົງ. ບໍ່ວ່າພາລະກິດໃດທີ່ພຣະອົງກະທຳແມ່ນເປັນການດຳເນີນພັນທະກິດຂອງພຣະອົງ; ສິ່ງທີ່ມະນຸດສາມາດເຮັດໄດ້ກໍຄື ປະຕິບັດໃຫ້ດີທີ່ສຸດຢູ່ໃນຂອບເຂດຂອງການຄຸ້ມຄອງ ແລະ ພາຍໃຕ້ການນຳພາຂອງພຣະອົງ.

ໃນຄວາມເປັນຈິງແລ້ວ ການທີ່ມະນຸດປະຕິບັດໜ້າທີ່ຂອງເຂົາຄືການບັນລຸຜົນສຳເລັດໃນທຸກສິ່ງທີ່ມີຢູ່ພາຍໃນມະນຸດ, ນັ້ນກໍຄື ສິ່ງທີ່ເປັນໄປໄດ້ສຳລັບມະນຸດ. ຫລັງຈາກນັ້ນ ໜ້າທີ່ຂອງເຂົາກໍຈະສຳເລັດ. ຂໍ້ບົກຜ່ອງຂອງມະນຸດໃນຊ່ວງການຮັບໃຊ້ຂອງເຂົາກໍຄ່ອຍໆຫຼຸດລົງ ໂດຍຜ່ານປະສົບການຢ່າງຕໍ່ເນື່ອງ ແລະ ຜ່ານຂະບວນການຂອງການພິພາກສາຂອງພວກເຂົາ; ສິ່ງເຫຼົ່ານັ້ນຈະບໍ່ຂັດຂວາງ ຫຼື ສິ່ງຜົນກະທົບຕໍ່ໜ້າທີ່ຂອງມະນຸດ. ຜູ້ທີ່ຢຸດໃນການຮັບໃຊ້ ຫຼື ຍ້ອມແພ້ ແລະ ທໍ້ຖອຍ ຍ້ອນຢ້ານກົວຂໍ້ບົກຜ່ອງທີ່ອາດຈະເກີດຂຶ້ນໃນການຮັບໃຊ້ຂອງພວກເຂົາ ຄືຄົນທີ່ຂີ້ຢ້ານທີ່ສຸດໃນບັນດາມະນຸດ. ຖ້າມະນຸດບໍ່ສາມາດສະແດງອອກສິ່ງທີ່ພວກເຂົາຄວນສະແດງອອກໃນຊ່ວງການຮັບໃຊ້ ຫຼື ບັນລຸຜົນ

ສຳເລັດໃນສິ່ງທີ່ເປັນໄປໄດ້ໃນຕົວສຳລັບພວກເຂົາ ແຕ່ກົງກັນຂ້າມພັດພາກັນເຮັດຫຼິ້ນ ແລະ ເຮັດຢ່າງບໍ່ຕັ້ງໃຈ, ພວກເຂົາໄດ້ເສຍໜ້າທີ່ ທີ່ສິ່ງມີຊີວິດທີ່ຖືກສ້າງຂຶ້ນຄວນມີ. ຜູ້ຄົນດັ່ງກ່າວແມ່ນຜູ້ທີ່ເອີ້ນວ່າ "ຄົນທຳມະດາ"; ພວກເຂົາແມ່ນຂີ້ເຫຍື່ອທີ່ບໍ່ມີປະໂຫຍດ. ຜູ້ຄົນດັ່ງກ່າວນີ້ຈະຖືກເອີ້ນຢ່າງຖືກຕ້ອງວ່າສິ່ງມີຊີວິດທີ່ຖືກສ້າງຂຶ້ນໄດ້ແນວໃດ? ພວກເຂົາບໍ່ແມ່ນສິ່ງມີຊີວິດທີ່ເສື່ອມຊາມທີ່ເປັ່ງແສງທາງພາຍນອກ ແຕ່ທາງໃນເນົ່າເໝັນບໍ? ຖ້າມະນຸດເອີ້ນຕົນເອງວ່າ ພຣະເຈົ້າ ແຕ່ບໍ່ສາມາດສະແດງອອກເຖິງຄວາມເປັນພຣະເຈົ້າໄດ້, ບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າ ຫຼື ເປັນຕົວແທນພຣະເຈົ້າໄດ້, ຄົນນັ້ນບໍ່ແມ່ນພຣະເຈົ້າຢ່າງບໍ່ຕ້ອງສົງໄສເລີຍ ເພາະວ່າ ເຂົາບໍ່ມີທາດແທ້ຂອງພຣະເຈົ້າ ແລະ ສິ່ງທີ່ພຣະເຈົ້າສາມາດບັນລຸຜົນໄດ້ໂດຍທຳມະຊາດ ແມ່ນບໍ່ມີຢູ່ພາຍໃນຕົວເຂົາ. ຖ້າມະນຸດສູນເສຍສິ່ງທີ່ຕົນເອງສາມາດໄດ້ຮັບໂດຍທຳມະຊາດ ກໍຈະບໍ່ສາມາດຖືວ່າ ເຂົາເປັນມະນຸດ ແລະ ເຂົາບໍ່ມີຄຸນຄ່າທີ່ຈະຢືນຢູ່ເປັນສິ່ງມີຊີວິດທີ່ຖືກສ້າງຂຶ້ນ ຫຼື ມາຢູ່ຕໍ່ໜ້າພຣະເຈົ້າ ຫຼື ຖືກເບິ່ງແຍງ ແລະ ຮັບໃຊ້ພຣະອົງ. ຍິ່ງໄປກວ່ານັ້ນ, ເຂົາບໍ່ມີຄ່າພໍທີ່ຈະໄດ້ຮັບຄວາມກະລຸນາຈາກພຣະເຈົ້າ ຖືກເບິ່ງແຍງດູແລ, ປົກປ້ອງ ແລະເຮັດໃຫ້ສົມບູນໂດຍພຣະເຈົ້າ. ຫຼາຍຄົນທີ່ໄດ້ສູນເສຍຄວາມໄວ້ວາງໃຈຈາກພຣະເຈົ້າ ສຸດທ້າຍກໍຈະສູນເສຍຄວາມກະລຸນາຈາກພຣະເຈົ້າ. ພວກເຂົາບໍ່ພຽງກຽດຊັງຄວາມປະພຶດຜິດຂອງຕົນ ແຕ່ພວກເຂົາເຜີຍແຜ່ແນວຄວາມຄິດຢ່າງບໍ່ມີຢາງອາຍວ່າ ວິທີທາງຂອງພຣະເຈົ້າແມ່ນບໍ່ຖືກຕ້ອງ ແລະ ພວກກະບົດເຫຼົ່ານີ້ຍັງປະຕິເສດວ່າ ພຣະເຈົ້າບໍ່ມີຈິງອີກ. ຜູ້ຄົນດັ່ງກ່າວນີ້ ທີ່ມີກັບຄວາມຕໍ່ຕ້ານແບບນີ້ ຈະມີສິດໄດ້ຮັບຄວາມກະລຸນາຈາກພຣະເຈົ້າໄດ້ແນວໃດ? ຜູ້ທີ່ບໍ່ປະຕິບັດໜ້າທີ່ຂອງຕົນແມ່ນໄດ້ຕໍ່ຕ້ານພຣະເຈົ້າ ແລະ ເປັນໜີ້ພຣະອົງຢ່າງຫຼວງຫຼາຍ ແຕ່ພວກເຂົາຫັນຫລັງໃສ່ພຣະເຈົ້າ ແລ້ວກໍໂຈມຕີພຣະເຈົ້າວ່າຜິດ. ມະນຸດປະເພດນີ້ຈະມີຄຸນຄ່າໃນການເຮັດໃຫ້ສົມບູນແບບໄດ້ແນວໃດ? ນີ້ບໍ່ແມ່ນສິ່ງທີ່ມາກ່ອນການຖືກໂຍນອອກ ແລະ ລົງໂທດບໍ? ຜູ້ຄົນທີ່ບໍ່ປະຕິບັດໜ້າທີ່ຂອງຕົນຕໍ່ໜ້າພຣະເຈົ້າແມ່ນຖືວ່າ ມີຄວາມຜິດຢ່າງຮ້າຍແຮງຢ່າງອາຊະຍາກຳຢູ່ແລ້ວ ເຊິ່ງແມ່ນແຕ່ຄວາມຕາຍກໍເປັນການລົງໂທດທີ່ບໍ່ພຽງພໍ, ແຕ່ເຖິງຢ່າງນັ້ນກໍຕາມ ພວກເຂົາຍັງກ້າໂຕ້ຖຽງກັບພຣະເຈົ້າ ແລະ ຖືເອົາຕົວເອງມາທຽບເທົ່າກັບພຣະອົງ. ການເຮັດໃຫ້ຜູ້ຄົນດັ່ງກ່າວສົມບູນຈະມີຄ່າຫຍັງ? ເມື່ອຜູ້ຄົນບໍ່ສາມາດປະຕິບັດໜ້າທີ່ຂອງຕົນໃຫ້ສຳເລັດ, ພວກເຂົາຄວນຮູ້ສຶກຜິດ ແລະ ຮູ້ສຶກເປັນໜີ້ບຸນຄຸນ; ພວກເຂົາຄວນກຽດຊັງຄວາມອ່ອນແອ ແລະ ຄວາມໄຮ້ປະໂຫຍດຂອງຕົນ, ຄວາມກະບົດ ແລະ ຄວາມເສື່ອມຊາມຂອງຕົນ ແລະ ຍິ່ງໄປກວ່ານັ້ນ ພວກເຂົາຄວນເສຍສະຫຼະຊີວິດຂອງຕົນເພື່ອພຣະເຈົ້າ. ເມື່ອນັ້ນເທົ່ານັ້ນ ມະນຸດ ພວກເຂົາຈຶ່ງແມ່ນສິ່ງມີຊີວິດທີ່ຖືກສ້າງຂຶ້ນ ທີ່ຮັກພຣະເຈົ້າແທ້ຈິງ ແລະ ມີແຕ່ຜູ້ຄົນດັ່ງກ່າວເທົ່ານັ້ນທີ່ສົມຄວນມີຄວາມສຸກກັບພອນ ແລະ ຄຳສັນຍາຂອງພຣະເຈົ້າ ແລະ ຖືກເຮັດໃຫ້ສົມບູນໂດຍພຣະອົງ. ພວກເຈົ້າສ່ວນຫຼາຍເປັນແນວໃດ? ພວກເຈົ້າປະຕິບັດຕໍ່ພຣະເຈົ້າ ທີ່ດຳລົງຊີວິດຢູ່ທ່າມກາງພວກເຈົ້າແນວໃດ? ພວກເຈົ້າໄດ້ເຮັດໜ້າທີ່ຕໍ່ໜ້າພຣະອົງແນວໃດ? ພວກເຈົ້າໄດ້ເຮັດທຸກສິ່ງທີ່ເຈົ້າຖືກຮຽກຮ້ອງໃຫ້ເຮັດເຖິງສິ່ງນັ້ນຈະເປັນການສູນເສຍຊີວິດຂອງເຈົ້າເອງແລ້ວບໍ? ພວກເຈົ້າໄດ້ເສຍສະຫຼະຫຍັງແດ່? ພວກເຈົ້າບໍ່ໄດ້ຮັບຫຍັງຫຼາຍຈາກເຮົາບໍ? ພວກເຈົ້າສາມາດຈຳແນກບໍ່? ພວກເຈົ້າຈິງຮັກພັກດີຕໍ່ເຮົາຫຼາຍພຽງ

ໃດ? ພວກເຈົ້າຮັບໃຊ້ເຮົາແບບໃດ? ມີຫຍັງແດ່ທີ່ເຮົາໄດ້ປະທານໃຫ້ພວກເຈົ້າ ແລະ ເຮັດເພື່ອພວກເຈົ້າ? ພວກເຈົ້າໄດ້ຮັບພິຈາລະນາເອົາສິ່ງນີ້ທັງໝົດແລ້ວບໍ? ພວກເຈົ້າໄດ້ຕັດສິນ ແລະ ປຽບທຽບສິ່ງນີ້ໃສ່ກັບສາມານສຳນຶກອັນເລັກນ້ອຍທີ່ພວກເຈົ້າມີຢູ່ໃນຕົວພວກເຈົ້າແລ້ວບໍ? ຄຳເວົ້າ ແລະ ການກະທຳຂອງພວກເຈົ້າຈະມີຄ່າກັບໃຜ? ເປັນໄປໄດ້ບໍວ່າ ການເສຍສະຫຼະອັນເລັກນ້ອຍຂອງພວກເຈົ້ານັ້ນຈະມີຄ່າພໍກັບທຸກສິ່ງທີ່ເຮົາໄດ້ປະທານໃຫ້ພວກເຈົ້າ? ເຮົາບໍ່ມີທາງເລືອກອື່ນ ແລະ ເຮົາໄດ້ອຸທິດຢ່າງເຕັມທີ່ເພື່ອພວກເຈົ້າ, ແຕ່ເຖິງຢ່າງນັ້ນກໍຕາມ ພວກເຈົ້າກໍຍັງເຊື່ອງເຈດຕະນາທີ່ຊົ່ວຮ້າຍ ແລະສອງຈິດສອງໃຈຕໍ່ເຮົາ. ນີ້ຄືຂອບເຂດໜ້າທີ່ ແລະ ວຽກງານດຽວຂອງພວກເຈົ້າ. ບໍ່ແມ່ນບໍ? ພວກເຈົ້າບໍ່ຮູ້ບໍວ່າ ພວກເຈົ້າບໍ່ສາມາດປະຕິບັດໜ້າທີ່ຂອງສິ່ງມີຊີວິດທີ່ຖືກສ້າງຂຶ້ນ? ຈະສາມາດຖືວ່າ ພວກເຈົ້າແມ່ນສິ່ງມີຊີວິດທີ່ຖືກສ້າງຂຶ້ນໄດ້ແນວໃດ? ສິ່ງທີ່ພວກເຈົ້າສະແດງອອກ ແລະ ດຳລົງຢູ່ນັ້ນບໍ່ຊັດເຈນສຳລັບພວກເຈົ້າບໍ? ພວກເຈົ້າລົ້ມເຫຼວໃນການປະຕິບັດຕໍ່ໜ້າທີ່ຂອງຕົນ, ແຕ່ພວກເຈົ້າສະແຫວງຫາທີ່ຈະໄດ້ຮັບຄວາມອົດທົນ ແລະ ຄວາມກະລຸນາຈາກພຣະເຈົ້າ. ບໍ່ໄດ້ມີການກຽມຄວາມກະລຸນາດັ່ງກ່າວໄວ້ສຳລັບຄົນທີ່ບໍ່ມີຄຸນຄ່າ ແລະ ຄົນຕໍ່າຊາມຄືພວກເຈົ້າ, ແຕ່ກຽມໄວ້ສຳລັບຄົນທີ່ບໍ່ຂໍຫຍັງ ແລະເຕັມໃຈຍອມເສຍສະຫລະ. ຄົນຄືພວກເຈົ້າ ທີ່ທຳມະດາ ແມ່ນບໍ່ສົມຄວນໄດ້ຮັບຄວາມກະລຸນາຈາກສະຫວັນແມ່ນແຕ່ໜ້ອຍດຽວ. ມີແຕ່ຄວາມຍາກລຳບາກ ແລະ ການລົງໂທດທີ່ບໍ່ມີວັນສິ້ນສຸດຈະຕາມພວກເຈົ້າໄປທຸກມື້! ຖ້າພວກເຈົ້າບໍ່ສາມາດຊື່ສັດຕໍ່ເຮົາ, ຊະຕາກຳຂອງພວກເຈົ້າເອງຈະພົບແຕ່ຄວາມທຸກທໍລະມານ. ຖ້າພວກເຈົ້າບໍ່ສາມາດມີຄວາມຮັບຜິດຊອບຕໍ່ພຣະທຳ ແລະ ພາລະກິດຂອງເຮົາ, ຜົນຮັບຂອງພວກເຈົ້າເອງຈະເປັນຜົນຮັບທີ່ຖືກລົງໂທດ. ຄວາມກະລຸນາ, ພອນ ແລະ ຊີວິດທີ່ວິເສດຂອງອານາຈັກຈະບໍ່ກ່ຽວຂ້ອງຫຍັງກັບພວກເຈົ້າ. ນີ້ຄືຈຸດຈົບທີ່ພວກເຈົ້າສົມຄວນຈະໄດ້ຮັບ ແລະ ເປັນຜົນກຳຂອງການກະທຳຂອງພວກເຈົ້າເອງ! ຜູ້ທີ່ໂງ່ຈ້າ ແລະ ຈອງຫອງບໍ່ພຽງແຕ່ບໍ່ພະຍາຍາມສຸດຄວາມສາມາດຂອງຕົນ ຫຼື ປະຕິບັດຕາມໜ້າທີ່ຂອງຕົນ, ແຕ່ພວກເຂົາຍັງແບມືຂໍຄວາມກະລຸນາ ຄືກັບວ່າສິ່ງທີ່ພວກເຂົາຂໍເປັນສິ່ງທີ່ພວກເຂົາສົມຄວນໄດ້ຮັບ. ຖ້າພວກເຂົາບໍ່ໄດ້ຮັບສິ່ງທີ່ພວກເຂົາຂໍ, ພວກເຂົາກໍຈະກາຍເປັນຄົນທີ່ບໍ່ຊື່ສັດຫຼາຍກວ່າເກົ່າ. ມະນຸດເຫຼົ່ານີ້ຈະຖືວ່າ ເປັນຄົນມີເຫດຜົນໄດ້ແນວໃດ? ພວກເຈົ້າມີຄວາມສາມາດຕໍ່າ ແລະ ໄຮ້ເຫດຜົນທີ່ສຸດ ໂດຍທີ່ບໍ່ສາມາດສຳເລັດໜ້າທີ່ ທີ່ຕົນເອງຄວນສຳເລັດໃນລະຫວ່າງການດຳເນີນພາລະກິດຂອງການຄຸ້ມຄອງນັ້ນໄດ້. ຄຸນຄ່າຂອງພວກເຈົ້າໄດ້ຕົກຕໍ່າລົງຢ່າງໄວ. ການທີ່ພວກເຈົ້າບໍ່ສາມາດຕອບແທນເຮົາສຳລັບການສະແດງຄວາມເມດຕາຕໍ່ພວກເຈົ້າ ນັ້ນຖືວ່າ ເປັນການຕໍ່ຕ້ານຢ່າງໃຫຍ່ຫຼວງ ເຊິ່ງພຽງພໍທີ່ຈະປະນາມພວກເຈົ້າ ແລະ ສະແດງເຖິງຄວາມບໍ່ກ້າຫານ, ຄວາມບໍ່ມີປັນຍາ, ຄວາມຕໍ່າຊາມ ແລະ ຄວາມໄຮ້ຄຸນຄ່າ. ແມ່ນຫຍັງໃຫ້ສິດພວກເຈົ້າຍື່ນມືຂອງພວກເຈົ້າອອກ? ການທີ່ພວກເຈົ້າບໍ່ສາມາດເປັນຜູ້ຊ່ວຍພາລະກິດຂອງເຮົາແມ່ນແຕ່ໜ້ອຍດຽວ, ການທີ່ບໍ່ສາມາດຈົງຮັກພັກດີ ແລະ ການທີ່ບໍ່ສາມາດຢືນເປັນພະຍານໃຫ້ກັບເຮົາໄດ້ ແມ່ນການກະທຳຜິດ ແລະ ຄວາມລົ້ມເຫຼວຂອງພວກເຈົ້າ ແຕ່ພວກເຈົ້າຜັດໂຈມຕີເຮົາ, ໃສ່ຮ້າຍປ້າຍສີເຮົາ ແລະຈົ່ມວ່າເຮົາບໍ່ຊອບທຳ. ນີ້ບໍຄືຄວາມຊື່ສັດຂອງພວກເຈົ້າ? ນີ້ບໍຄືຄວາມຮັກຂອງພວກເຈົ້າ? ນອກຈາກ

ສິ່ງນີ້ແລ້ວ ພວກເຈົ້າສາມາດເຮັດພາລະກິດຫຍັງໄດ້ແດ່? ພວກເຈົ້າໄດ້ປະກອບສ່ວນຫຍັງແດ່ເຂົ້າໃນພາລະກິດທີ່ໄດ້ເຮັດໄປທັງໝົດ? ພວກເຈົ້າໄດ້ໃຊ້ເສຍສະຫຼະຫຼາຍປານໃດ? ເຮົາໄດ້ສະແດງຄວາມອົດທົນຫຼາຍແລ້ວ ໂດຍທີ່ເຮົາບໍ່ໄດ້ຕຳນິພວກເຈົ້າ, ແຕ່ເຖິງຢ່າງນັ້ນກໍຕາມ ພວກເຈົ້າຍັງມີຂໍ້ແກ້ຕົວກັບເຮົາຢ່າງໜ້າບໍ່ອາຍ ແລະ ຈົ່ມວ່າໃຫ້ເຮົາຢ່າງລັບໆ. ພວກເຈົ້າມີຄວາມເປັນມະນຸດແມ່ນແຕ່ໜ້ອຍຢູ່ບໍ່? ເຖິງແມ່ນວ່າ ໜ້າທີ່ຂອງມະນຸດຈະມີຮອຍດ່າງຈາກຈິດໃຈ ແລະ ແນວຄວາມຄິດຂອງມະນຸດ ແຕ່ເຈົ້າຕ້ອງປະຕິບັດໜ້າທີ່ຂອງເຈົ້າ ແລະ ສະແດງຄວາມຈົງຮັກພັກດີຂອງເຈົ້າ. ຄວາມບໍ່ບໍລິສຸດໃນວຽກງານຂອງມະນຸດແມ່ນເປັນບັນຫາກ່ຽວກັບຄວາມສາມາດ ແຕ່ຖ້າມະນຸດບໍ່ປະຕິບັດໜ້າທີ່ຂອງຕົນ ນັ້ນກໍສະແດງເຖິງການຕໍ່ຕ້ານຂອງເຂົາ. ລະຫວ່າງໜ້າທີ່ຂອງມະນຸດ ແລະ ເລື່ອງທີ່ວ່າພວກເຂົາຈະໄດ້ຮັບພອນ ຫຼື ວ່າຄຳສາບແຊ່ງນັ້ນ ແມ່ນບໍ່ກ່ຽວຂ້ອງກັນ. ໜ້າທີ່ແມ່ນສິ່ງທີ່ມະນຸດຄວນປະຕິບັດ; ມັນແມ່ນວຽກງານທີ່ສະຫວັນສົ່ງມາ ແລະ ບໍ່ຄວນອີງໃສ່ຜົນຕອບແທນ, ເງື່ອນໄຂ ແລະ ເຫດຜົນ. ເມື່ອນັ້ນເທົ່ານັ້ນ ຈຶ່ງຖືວ່າ ເຂົາໄດ້ປະຕິບັດຕໍ່ໜ້າທີ່ຂອງຕົນ. ການໄດ້ຮັບພອນແມ່ນເວລາທີ່ຄົນເຮົາຖືກເຮັດໃຫ້ສົມບູນ ແລະ ມີຄວາມສຸກກັບພອນຂອງພຣະເຈົ້າຫຼັງຈາກໄດ້ປະສົບກັບການພິພາກສາ. ການຖືກສາບແຊ່ງແມ່ນເວລາທີ່ໃຈຂອງບາງຄົນບໍ່ປ່ຽນແປງຫລັງຈາກປະສົບກັບການຂ້ຽນຕີ ແລະ ການພິພາກສາ, ມັນແມ່ນເວລາທີ່ພວກເຂົາບໍ່ໄດ້ປະສົບກັບການຖືກເຮັດໃຫ້ສົມບູນ ນອກຈາກຖືກລົງໂທດ. ແຕ່ຢ່າງໃດກໍຕາມ ບໍ່ວ່າພວກເຂົາຈະໄດ້ຮັບພອນ ຫຼື ຖືກສາບແຊ່ງກໍຕາມ, ສິ່ງມີຊີວິດທີ່ຖືກສ້າງຂຶ້ນກໍຄວນສຳເລັດໜ້າທີ່ຂອງຕົນ, ປະຕິບັດສິ່ງທີ່ພວກເຂົາຄວນປະຕິບັດ ແລະ ເຮັດໃນສິ່ງທີ່ພວກເຂົາສາມາດເຮັດໄດ້; ນີ້ຄືຢ່າງໜ້ອຍທີ່ຄົນທີ່ສະແຫວງຫາພຣະເຈົ້າຄວນເຮັດ. ເຈົ້າບໍ່ຄວນປະຕິບັດໜ້າທີ່ຂອງເຈົ້າພຽງແຕ່ຢາກໄດ້ຮັບພອນ ແລະ ເຈົ້າບໍ່ຄວນປະຕິເສດທີ່ຈະກະທຳເພາະຢ້ານຖືກສາບແຊ່ງ. ເຮົາຂໍບອກພວກເຈົ້າກ່ຽວກັບສິ່ງນີ້ວ່າ: ການປະຕິບັດໜ້າທີ່ຂອງມະນຸດແມ່ນສິ່ງທີ່ເຂົາຄວນເຮັດ ແລະ ຖ້າເຂົາບໍ່ສາມາດປະຕິບັດໜ້າທີ່ຂອງຕົນໄດ້ ນັ້ນແມ່ນຄວາມກະບົດຂອງເຂົາ. ຜ່ານຂະບວນການຂອງການປະຕິບັດໜ້າທີ່ຂອງຕົນເທົ່ານັ້ນ, ມະນຸດຈຶ່ງຈະຄ່ອຍປ່ຽນແປງ ແລະ ຜ່ານຂະບວນການນີ້ເທົ່ານັ້ນ ມະນຸດຈຶ່ງຈະສະແດງເຖິງຄວາມສັດຊື່ຂອງຕົນໄດ້. ດັ່ງນັ້ນ, ຍິ່ງເຈົ້າສາມາດປະຕິບັດໜ້າທີ່ຂອງຕົນຫຼາຍເທົ່າໃດ, ເຈົ້າກໍຍິ່ງໄດ້ຮັບຄວາມຈິງຫຼາຍເທົ່ານັ້ນ ແລະ ການສະແດງອອກຂອງເຈົ້າກໍຍິ່ງຈະກາຍເປັນຈິງຫຼາຍຂຶ້ນ. ຜູ້ທີ່ພຽງແຕ່ເຮັດໜ້າທີ່ແບບຜິວເຜີນ ແລະ ບໍ່ສະແຫວງຫາຄວາມຈິງຈະຖືກໂຍນອອກໃນທີ່ສຸດ ເພາະວ່າມະນຸດດັ່ງກ່າວບໍ່ໄດ້ເຮັດໜ້າທີ່ຂອງຕົນໃນການປະຕິບັດຄວາມຈິງ ແລະ ບໍ່ໄດ້ປະຕິບັດຄວາມຈິງເຂົ້າໃນການປະຕິບັດໜ້າທີ່ຂອງພວກເຂົາໃຫ້ສຳເລັດ. ພວກເຂົາແມ່ນຜູ້ຄົນທີ່ຍັງບໍ່ປ່ຽນແປງ ແລະ ຈະຖືກສາບແຊ່ງ. ບໍ່ມີພຽງແຕ່ການສະແດງອອກຂອງພວກເຂົາທີ່ບໍ່ບໍລິສຸດ, ແຕ່ທຸກສິ່ງທີ່ພວກເຂົາສະແດງອອກນັ້ນ ແມ່ນຊົ່ວຮ້າຍໝົດ.

ໃນຍຸກແຫ່ງພຣະຄຸນ, ພຣະເຢຊູກໍຍັງໄດ້ກ່າວພຣະທຳຫຼາຍຂໍ້ ແລະ ກະທຳພາລະກິດຫຼາຍຢ່າງ. ພຣະອົງແຕກຕ່າງຈາກເອຊາຢາແນວໃດ? ພຣະອົງແຕກຕ່າງຈາກດານີເອນແນວໃດ? ພຣະອົງແມ່ນສາສະດາບໍ? ເປັນຫຍັງຈຶ່ງເວົ້າວ່າ ພຣະອົງເປັນພຣະຄຣິດ? ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງ

ພວກເຂົາ? ພວກເຂົາທຸກຄົນແມ່ນມະນຸດທີ່ກ່າວພຣະທຳ ແລະ ບໍ່ໜ້ອຍກໍຫຼາຍ ພຣະທຳຂອງພວກເຂົາກໍປະກົດຄືຄຳເວົ້າຂອງມະນຸດ. ພວກເຂົາທຸກຄົນກ່າວພຣະທຳ ແລະ ກະທຳພາລະກິດ. ສາສະດາຫຼາຍຄົນໃນພຣະສັນຍາເກົ່າສາມາດທຳນາຍໄດ້ ແລະ ພຣະເຢຊູກໍສາມາດທຳນາຍໄດ້ເຊັ່ນກັນ. ເຫດໃດຈຶ່ງເປັນດັ່ງນັ້ນ? ຄວາມແຕກຕ່າງໃນນີ້ ແມ່ນອີງຕາມລັກສະນະຂອງພາລະກິດ. ເພື່ອໃຫ້ເຂົ້າໃຈໃນເລື່ອງນີ້, ເຈົ້າຕ້ອງບໍ່ຖືເອົາລັກສະນະຂອງເນື້ອໜັງ ແລະ ເຈົ້າບໍ່ຄວນຖືເອົາຄວາມເລິກ ຫຼື ຄວາມຕື້ນຂອງຄຳເວົ້າຂອງພວກເຂົາ. ກ່ອນອື່ນໝົດ ເຈົ້າຕ້ອງຖືເອົາພາລະກິດຂອງພວກເຂົາ ແລະ ຜົນຂອງພາລະກິດທີ່ພວກເຂົາບັນລຸໃນມະນຸດ. ຄຳທຳນາຍທີ່ຖືກກ່າວໂດຍສາສະດາໃນເວລານັ້ນບໍ່ໄດ້ສະໜອງຊີວິດຂອງມະນຸດ ແລະ ແຮງດົນໃຈທີ່ໄດ້ຮັບຈາກຜູ້ຄົນຕ່າງໆເຊັ່ນເອຊາຢາ ແລະ ເດນີເອນກໍເປັນຄຳທຳນາຍ ແລະ ບໍ່ແມ່ນວທາງຂອງຊີວິດ. ຖ້າບໍ່ແມ່ນຍ້ອນການເປີດເຜີຍໂດຍກົງຂອງພຣະເຢໂຮວາ ກໍຈະບໍ່ມີຜູ້ໃດສາມາດກະທຳພາລະກິດນັ້ນໄດ້ ເຊິ່ງເປັນໄປບໍ່ໄດ້ສຳລັບມະນຸດ. ພຣະເຢຊູກໍໄດ້ກ່າວພຣະທຳຢ່າງຫຼວງຫຼາຍເຊັ່ນດຽວກັນ ແຕ່ພຣະທຳດັ່ງກ່າວແມ່ນແນວທາງຂອງຊີວິດ ທີ່ມະນຸດສາມາດຄົ້ນຫາຫົນທາງນັ້ນເພື່ອນຳໃຊ້ເຂົ້າໃນການປະຕິບັດ. ເວົ້າໄດ້ວ່າ ປະການທີໜຶ່ງຄື ພຣະອົງສາມາດສະໜອງຊີວິດຂອງມະນຸດ ຍ້ອນວ່າພຣະເຢຊູຄືຊີວິດ; ປະການທີສອງຄື ພຣະອົງສາມາດປ່ຽນແປງການອອກນອກເສັ້ນທາງຂອງມະນຸດໄດ້; ປະການທີສາມຄື ພາລະກິດຂອງພຣະອົງສາມາດສືບແທນພາລະກິດຂອງພຣະເຢໂຮວາເພື່ອສືບຕໍ່ຍຸກ; ປະການທີສີ່ຄື ພຣະອົງສາມາດເຂົ້າໃຈຄວາມຕ້ອງການພາຍໃນມະນຸດ ແລະ ເຂົ້າໃຈສິ່ງທີ່ມະນຸດຂາດເຂີນ; ປະການທີຫ້າຄື ພຣະອົງສາມາດນຳທາງໃນຍຸກໃໝ່ ແລະ ສິ້ນສຸດຍຸກເກົ່າ. ນັ້ນແມ່ນເຫດຜົນທີ່ພຣະອົງຖືກເອີ້ນວ່າພຣະເຈົ້າ ແລະ ພຣະຄຣິດ; ພຣະອົງບໍ່ພຽງແຕ່ແຕກຕ່າງຈາກເອຊາຢາເທົ່ານັ້ນ ແຕ່ຍັງແຕກຕ່າງຈາກສາສະດາທຸກຄົນອີກດ້ວຍ. ໃຫ້ຍົກເອົາເອຊາຢາເປັນການປຽບທຽບສຳລັບພາລະກິດຂອງສາສະດາ. ການປຽບທຽບທີໜຶ່ງຄື ລາວບໍ່ສາມາດສະໜອງໃຫ້ກັບຊີວິດມະນຸດ; ການປຽບທຽບທີສອງຄື ລາວບໍ່ສາມາດນຳທາງໃນຍຸກໃໝ່. ລາວປະຕິບັດວຽກງານພາຍໃຕ້ການນຳພາຂອງພຣະເຢໂຮວາ ແລະ ບໍ່ແມ່ນເປັນຜູ້ນຳທາງໃນຍຸກໃໝ່. ການປຽບທຽບທີສາມຄື ຄຳເວົ້າທີ່ລາວກ່າວແມ່ນເໜືອກວ່າລາວ. ລາວໄດ້ຮັບການເປີດເຜີຍໂດຍກົງຈາກພຣະວິນຍານຂອງພຣະເຈົ້າ ແລະ ຄົນອື່ນຈະບໍ່ເຂົ້າໃຈ ເຖິງວ່າຈະໄດ້ຍິນຄຳກ່າວເຫຼົ່ານັ້ນ. ພຽງສອງສາມສິ່ງເຫຼົ່ານີ້ເທົ່ານັ້ນກໍພຽງພໍທີ່ຈະພິສູດໃຫ້ເຫັນວ່າ ຄຳກ່າວຂອງລາວບໍ່ໄດ້ແຕກຕ່າງຈາກການທຳນາຍ ແລະ ບໍ່ໄດ້ຫຼາຍກວ່າພາກສ່ວນໜຶ່ງຂອງພາລະກິດທີ່ເຮັດແທນພຣະເຢໂຮວາ. ຢ່າງໃດກໍຕາມ, ລາວບໍ່ສາມາດເປັນຕົວແທນພຣະເຢໂຮວາໄດ້ທັງໝົດ. ລາວເປັນພຽງຜູ້ຮັບໃຊ້ພຣະເຢໂຮວາເທົ່ານັ້ນ, ກໍຄື ເປັນເຄື່ອງມືຮັບໃຊ້ໃນພາລະກິດຂອງພຣະເຢໂຮວາ. ລາວພຽງປະຕິບັດພາລະກິດຢູ່ໃນຍຸກແຫ່ງພຣະບັນຍັດ ແລະ ຢູ່ໃນຂອບເຂດຂອງພາລະກິດຂອງພຣະເຢໂຮວາເທົ່ານັ້ນ; ລາວບໍ່ໄດ້ປະຕິບັດພາລະກິດອອກນອກຍຸກແຫ່ງພຣະບັນຍັດ. ໃນທາງກົງກັນຂ້າມ, ພາລະກິດຂອງພຣະເຢຊູແມ່ນແຕກຕ່າງ. ພຣະອົງປະຕິບັດເກີນຂອບເຂດຂອງພາລະກິດຂອງພຣະເຢໂຮວາ; ພຣະອົງປະຕິບັດພາລະກິດເປັນພຣະເຈົ້າຜູ້ບັງເກີດເປັນມະນຸດ ແລະ ໄດ້ຜ່ານປະສົບການຂອງການໄຖ່ບາບໂດຍຖືກຄຶງໃສ່ໄມ້ກາງແຂນ ເພື່ອໄຖ່ບາບມວນ

ມະນຸດຊາດ. ໝາຍຄວາມວ່າ ພຣະອົງດຳເນີນພາລະກິດໃໝ່ຢູ່ນອກຂອບເຂດພາລະກິດທີ່ກະທຳໂດຍພຣະເຢໂຮວາ. ນີ້ແມ່ນການນຳທາງໃນຍຸກໃໝ່. ນອກຈາກນັ້ນ, ພຣະອົງສາມາດກ່າວເຖິງສິ່ງທີ່ມະນຸດບໍ່ສາມາດບັນລຸຜົນໄດ້. ພາລະກິດຂອງພຣະອົງແມ່ນປະຕິບັດຢູ່ໃນການຄຸ້ມຄອງຂອງພຣະເຈົ້າ ແລະ ປະກອບດ້ວຍມວນມະນຸດທັງໝົດ. ພຣະອົງບໍ່ໄດ້ກະທຳພາລະກິດຕໍ່ມະນຸດພຽງສອງສາມຄົນ ແລະ ພາລະກິດຂອງພຣະອົງບໍ່ໄດ້ມີໄວ້ເພື່ອນຳພາມະນຸດພຽງຈຳນວນຈຳກັດ. ສຳລັບວິທີທີ່ພຣະເຈົ້າບັງເກີດເປັນມະນຸດ, ວິທີທີ່ພຣະວິນຍານໃຫ້ການເປີດເຜີຍໃນເວລານັ້ນ ແລະ ວິທີທີ່ພຣະວິນຍານລົງມາສູ່ມະນຸດເພື່ອກະທຳພາລະກິດ, ສິ່ງເຫຼົ່ານີ້ແມ່ນເປັນສິ່ງທີ່ມະນຸດບໍ່ສາມາດເຫັນ ຫຼື ສຳຜັດໄດ້. ມັນເປັນໄປບໍ່ໄດ້ທີ່ສຸດທີ່ຈະໃຊ້ຄວາມຈິງເຫຼົ່ານີ້ເພື່ອເປັນຫຼັກຖານພິສູດວ່າ ພຣະອົງຄືພຣະເຈົ້າຜູ້ບັງເກີດເປັນມະນຸດ. ດ້ວຍເຫດນັ້ນ, ຈຶ່ງສາມາດຈຳແນກໄດ້ໃນທ່າມກາງພຣະທຳ ແລະ ພາລະກິດຂອງພຣະເຈົ້າເທົ່ານັ້ນ ເຊິ່ງເປັນສິ່ງທີ່ມະນຸດສາມາດຈັບຕ້ອງໄດ້. ພຽງສິ່ງນີ້ເທົ່ານັ້ນຄືຄວາມຈິງ. ນີ້ກໍເນື່ອງຈາກວ່າເຈົ້າບໍ່ສາມາດເຫັນເລື່ອງຂອງພຣະວິນຍານໄດ້ ແລະ ມີພຽງພຣະເຈົ້າເທົ່ານັ້ນທີ່ຮັບຮູ້ເລື່ອງດັ່ງກ່າວຢ່າງຊັດເຈນ ແລະ ແມ່ນແຕ່ພຣະເຈົ້າຜູ້ບັງເກີດເປັນເນື້ອໜັງກໍບໍ່ສາມາດຮູ້ທຸກສິ່ງໄດ້; ເຈົ້າພຽງແຕ່ສາມາດຢືນຢັນວ່າ ພຣະອົງເປັນພຣະເຈົ້າ ຫຼື ບໍ່ ຈາກພາລະກິດທີ່ພຣະອົງໄດ້ກະທຳເທົ່ານັ້ນ. ຈາກພາລະກິດຂອງພຣະອົງ, ສາມາດເຫັນໄດ້ວ່າ: ສິ່ງທີໜຶ່ງຄື ພຣະອົງສາມາດເປີດຍຸກໃໝ່; ສິ່ງທີສອງຄື ພຣະອົງສາມາດສະໜອງຊີວິດຂອງມະນຸດ ແລະ ສະແດງໃຫ້ມະນຸດເຫັນເສັ້ນທາງເພື່ອປະຕິບັດຕາມ. ສິ່ງນີ້ແມ່ນພຽງພໍທີ່ຈະພິສູດວ່າ ພຣະອົງຄືພຣະເຈົ້າ. ຢ່າງໜ້ອຍທີ່ສຸດ ພາລະກິດທີ່ພຣະອົງກະທຳສາມາດເປັນຕົວແທນພຣະວິນຍານຂອງພຣະເຈົ້າທັງໝົດ ແລະ ຈາກພາລະກິດດັ່ງກ່າວນັ້ນ ແມ່ນສາມາດເຫັນໄດ້ວ່າພຣະວິນຍານຂອງພຣະເຈົ້າແມ່ນສະຖິດຢູ່ພາຍໃນພຣະອົງ. ຍ້ອນວ່າ ພາລະກິດທີ່ກະທຳໂດຍພຣະເຈົ້າຜູ້ບັງເກີດເປັນມະນຸດນັ້ນ ສ່ວນໃຫຍ່ແລ້ວແມ່ນເພື່ອນຳທາງໃນຍຸກໃໝ່, ນຳພາພາລະກິດໃໝ່ ແລະ ເປີດໂລກໃໝ່, ສິ່ງເຫຼົ່ານີ້ເທົ່ານັ້ນແມ່ນພຽງພໍທີ່ຈະພິສູດໃຫ້ເຫັນວ່າ ພຣະອົງຄືພຣະເຈົ້າ. ສະນັ້ນ, ສິ່ງນີ້ຈຶ່ງເຮັດໃຫ້ພຣະອົງແຕກຕ່າງຈາກເອຊາຢາ, ດານີເອນ ແລະ ສາສະດາຜູ້ຍິ່ງໃຫຍ່ອື່ນໆ. ເອຊາຢາ, ດານີເອນ ແລະ ຄົນອື່ນໆທັງໝົດແມ່ນຢູ່ໃນຊົນຊັ້ນທີ່ມີການສຶກສາ ແລະ ວັດທະນະທຳຢ່າງສູງ; ພວກເຂົາບໍ່ແມ່ນມະນຸດທຳມະດາສາມັນ ທີ່ຢູ່ພາຍໃຕ້ການນຳພາຂອງພຣະເຢໂຮວາ. ເນື້ອໜັງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດແມ່ນມີຄວາມຮູ້ ແລະ ບໍ່ໄດ້ຂາດສະຕິປັນຍາເຊັ່ນກັນ ແຕ່ໂດຍສະເພາະແລ້ວຄວາມເປັນມະນຸດຂອງພຣະອົງແມ່ນທຳມະດາສາມັນ. ພຣະອົງເປັນມະນຸດທຳມະດາ ແລະ ການເບິ່ງດ້ວຍສາຍຕາເປົ່າຈະບໍ່ສາມາດເຂົ້າໃຈຄວາມເປັນມະນຸດພິເສດ ກ່ຽວກັບພຣະອົງ ຫຼື ພົບເຫັນສິ່ງໃດໜຶ່ງໃນຄວາມເປັນມະນຸດຂອງພຣະອົງເຊິ່ງແຕກຕ່າງຈາກຄົນອື່ນ. ພຣະອົງບໍ່ໄດ້ເໜືອທຳມະຊາດ ຫຼື ພິເສດຫຍັງເລີຍ ແລະ ພຣະອົງບໍ່ມີການສຶກສາ ແລະ ຄວາມຮູ້ສູງ ຫຼື ທິດສະດີຫຍັງ. ຊີວິດທີ່ພຣະອົງກ່າວເຖິງ ແລະ ເສັ້ນທາງທີ່ພຣະອົງນຳພາໄປແມ່ນບໍ່ໄດ້ອອກມາຜ່ານທິດສະດີ, ຜ່ານຄວາມຮູ້, ຜ່ານປະສົບການຊີວິດ ຫຼື ຜ່ານການອົບໂຮມລ້ຽງດູຈາກຄອບຄົວ. ແຕ່ກົງກັນຂ້າມ, ສິ່ງເຫຼົ່ານັ້ນແມ່ນພາລະກິດໂດຍກົງຂອງພຣະວິນຍານ ເຊິ່ງແມ່ນພາລະກິດຂອງການບັງເກີດເປັນເນື້ອໜັງ. ຍ້ອນວ່າ ມະນຸດມີແນວ

ຄວາມຄິດຫຼາຍກ່ຽວກັບພຣະເຈົ້າ ແລະ ໂດຍສະເພາະ ຍ້ອນວ່າ ແນວຄວາມຄິດເຫຼົ່ານີ້ເກີດຈາກອົງປະກອບຫຼາຍຢ່າງທີ່ເລື່ອນລອຍ ແລະ ເໜືອທຳມະຊາດ ເຊິ່ງໃນສາຍຕາມະນຸດ ພຣະເຈົ້າປົກກະຕິທີ່ມີຄວາມອ່ອນແອຂອງມະນຸດ ທີ່ບໍ່ສາມາດສ້າງໝາຍສຳຄັນ ແລະ ສິ່ງອະພິນິຫານນັ້ນ ບໍ່ແມ່ນພຣະເຈົ້າຢ່າງແນ່ນອນ. ແລ້ວສິ່ງເຫຼົ່ານີ້ບໍ່ແມ່ນແນວຄວາມຄິດທີ່ຜິດຂອງມະນຸດບໍ? ຖ້າເນື້ອໜັງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດບໍ່ແມ່ນເນື້ອໜັງມະນຸດທຳມະດາ ແລ້ວຈະເວົ້າໄດ້ວ່າ ພຣະອົງກາຍເປັນເນື້ອໜັງໄດ້ແນວໃດ? ການເປັນເນື້ອໜັງແມ່ນການເປັນມະນຸດທຳມະດາ ແລະ ປົກກະຕິ; ຖ້າພຣະອົງໄດ້ເປັນສິ່ງທີ່ມີຊີວິດເໜືອທຳມະຊາດ, ພຣະອົງກໍຈະບໍ່ເປັນເນື້ອໜັງ. ເພື່ອພິສູດວ່າ ພຣະອົງເປັນເນື້ອໜັງ, ພຣະເຈົ້າຜູ້ບັງເກີດເປັນມະນຸດຈຳເປັນຕ້ອງມີເນື້ອໜັງທຳມະດາ. ນີ້ກໍພຽງເພື່ອເຮັດສຳເລັດຄວາມສຳຄັນຂອງການບັງເກີດເປັນມະນຸດ. ເຖິງຢ່າງໃດກໍຕາມ, ນີ້ບໍ່ແມ່ນກໍລະນີຂອງສາສະດາ ແລະ ບຸດຊາຍຂອງມະນຸດ. ພວກເຂົາເປັນມະນຸດທີ່ມີພອນສະຫວັນ ທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດ; ໃນສາຍຕາຂອງມະນຸດ ຄວາມເປັນມະນຸດຂອງພວກເຂົາແມ່ນຍິ່ງໃຫຍ່ເປັນພິເສດ ແລະ ພວກເຂົາກະທຳຫຼາຍຢ່າງທີ່ເໜືອຄວາມເປັນມະນຸດທຳມະດາ. ດ້ວຍເຫດນີ້, ມະນຸດຈຶ່ງຖືວ່າ ພວກເຂົາເປັນພຣະເຈົ້າ. ດຽວນີ້ພວກເຈົ້າທຸກຄົນຕ້ອງເຂົ້າໃຈສິ່ງນີ້ໃຫ້ຈະແຈ້ງ ເພາະວ່າ ມັນເປັນບັນຫາທີ່ມະນຸດທຸກຄົນໃນຍຸກຜ່ານມາສັບສົນໄດ້ງ່າຍທີ່ສຸດ. ພ້ອມນີ້, ການບັງເກີດເປັນມະນຸດຄືສິ່ງລຶກລັບທີ່ສຸດຂອງທຸກໆສິ່ງ ແລະ ພຣະເຈົ້າຜູ້ບັງເກີດເປັນມະນຸດຄືສິ່ງທີ່ຍາກທີ່ສຸດທີ່ມະນຸດຈະຮັບໄດ້. ສິ່ງທີ່ເຮົາເວົ້າຊ່ວຍເຮັດໃຫ້ການເຮັດໜ້າທີ່ຂອງພວກເຈົ້າສຳເລັດ ແລະ ເພື່ອຄວາມເຂົ້າໃຈຂອງພວກເຈົ້າຕໍ່ຄວາມລຶກລັບຂອງການບັງເກີດເປັນມະນຸດ. ທັງໝົດນີ້ແມ່ນກ່ຽວຂ້ອງກັບການຄຸ້ມຄອງໄປເຖິງນິມິດຂອງພຣະເຈົ້າ. ຄວາມເຂົ້າໃຈຂອງພວກເຈົ້າກ່ຽວກັບສິ່ງນີ້ຈະເປັນຜົນປະໂຫຍດຢ່າງຍິ່ງສຳລັບການໄດ້ຮັບຄວາມຮູ້ກ່ຽວກັບນິມິດ ເຊິ່ງນັ້ນກໍຄື ພາລະກິດຂອງການຄຸ້ມຄອງຂອງພຣະເຈົ້າ. ດ້ວຍວິທີນີ້, ພວກເຈົ້າຈະຍັງໄດ້ຮັບຄວາມເຂົ້າໃຈຢ່າງຫຼວງຫຼາຍໃນໜ້າທີ່ທີ່ມະນຸດປະເພດຕ່າງໆຄວນປະຕິບັດ. ເຖິງແມ່ນວ່າ ພຣະທຳເຫຼົ່ານີ້ບໍ່ໄດ້ສະແດງໃຫ້ພວກເຈົ້າເຫັນວິທີທາງໂດຍກົງ ແຕ່ພຣະທຳດັ່ງກ່າວຍັງຄົງຊ່ວຍພວກເຈົ້າໄດ້ຫຼາຍໃນການເຂົ້າສູ່ ຍ້ອນວ່າ ຊີວິດຂອງພວກເຈົ້າໃນປັດຈຸບັນແມ່ນຂາດນິມິດຢ່າງຫຼວງຫຼາຍ ແລະ ສິ່ງນີ້ຈະກາຍມາເປັນອຸປະສັກຂັດຂວາງການເຂົ້າສູ່ຂອງພວກເຈົ້າຢ່າງໃຫຍ່ຫຼວງ. ຖ້າພວກເຈົ້າບໍ່ສາມາດເຂົ້າໃຈບັນຫາເຫຼົ່ານີ້ໄດ້, ພວກເຈົ້າກໍຈະບໍ່ມີແຮງບັນດານໃຈທີ່ຈະຜັກດັນການເຂົ້າສູ່ຂອງພວກເຈົ້າ. ແລ້ວການສະແຫວງຫາແບບນັ້ນຈະສາມາດຊ່ວຍໃຫ້ພວກເຈົ້າປະຕິບັດໜ້າທີ່ຂອງພວກເຈົ້າໃຫ້ໄດ້ດີທີ່ສຸດໄດ້ແນວໃດ?

# ພຣະເຈົ້າແມ່ນພຣະຜູ້ເປັນເຈົ້າ ແຫ່ງການຊົງສ້າງທັງປວງ

ໜຶ່ງຂັ້ນຕອນຂອງພາລະກິດສອງຍຸກທີ່ຜ່ານມາແມ່ນຖືກປະຕິບັດຢູ່ໃນອິດສະຣາເອນ ແລະ ອີກຂັ້ນຕອນໜຶ່ງແມ່ນຖືກປະຕິບັດຢູ່ໃນຢູດາຍ. ເວົ້າລວມແລ້ວ, ບໍ່ມີຂັ້ນຕອນໃດຂອງພາລະກິດນີ້ອອກນອກອິດສະຣາເອນເລີຍ ແລະ ແຕ່ລະຂັ້ນຕອນແມ່ນຖືກປະຕິບັດໃນຜູ້ຄົນທີ່ຖືກເລືອກກຸ່ມທຳອິດ. ສະນັ້ນ, ຊາວອິດສະຣາເອນເຊື່ອວ່າ ພຣະເຈົ້າເຢໂຮວາແມ່ນພຣະເຈົ້າພຣະອົງດຽວຂອງຊາວອິດສະຣາເອນ. ເນື່ອງຈາກພຣະເຢຊູເຮັດພາລະກິດຢູ່ໃນຢູດາຍ ບ່ອນທີ່ພຣະອົງປະຕິບັດພາລະກິດຂອງການຖືກຄຶງເທິງໄມ້ກາງແຂນ, ຊາວຢິວເບິ່ງພຣະອົງເປັນພຣະຜູ້ໄຖ່ບາບຂອງຊາວຢິວ. ພວກເຂົາຄິດວ່າ ພຣະອົງແມ່ນກະສັດຂອງຊາວຢິວເທົ່ານັ້ນບໍ່ແມ່ນກະສັດຂອງຄົນຊາດອື່ນ; ພຣະອົງບໍ່ແມ່ນພຣະຜູ້ເປັນເຈົ້າທີ່ໄຖ່ບາບໃຫ້ຄົນອັງກິດ ຫຼື ພຣະຜູ້ເປັນເຈົ້າທີ່ໄຖ່ບາບໃຫ້ຄົນອາເມຣິກາ, ແຕ່ພຣະອົງແມ່ນພຣະຜູ້ເປັນເຈົ້າທີ່ໄຖ່ບາບໃຫ້ຊາວອິດສະຣາເອນ ແລະ ມີແຕ່ຊາວຢິວທີ່ພຣະອົງໄຖ່ບາບໃຫ້. ທີ່ຈິງແລ້ວ, ພຣະອົງແມ່ນພຣະຜູ້ເປັນເຈົ້າຂອງສັບພະສິ່ງທັງປວງ. ພຣະອົງແມ່ນພຣະເຈົ້າຜູ້ສ້າງສັບພະສິ່ງທັງປວງ. ພຣະອົງບໍ່ແມ່ນພຽງແຕ່ເປັນພຣະເຈົ້າຂອງຊາວອິດສະຣາເອນ ຫຼື ບໍ່ແມ່ນພຽງແຕ່ເປັນພຣະເຈົ້າຂອງຊາວຢິວ. ພຣະອົງແມ່ນພຣະເຈົ້າຂອງສັບພະສິ່ງທັງປວງ. ສອງຂັ້ນຕອນຂອງພາລະກິດທີ່ຜ່ານມາຂອງພຣະອົງເກີດຂຶ້ນຢູ່ໃນອິດສະຣາເອນ ເຊິ່ງໄດ້ສ້າງຄວາມເຂົ້າໃຈໃນບາງຢ່າງພາຍໃນມະນຸດ. ພວກເຂົາເຊື່ອວ່າ ພຣະເຢໂຮວາດຳເນີນພາລະກິດຂອງພຣະອົງໃນອິດສະຣາເອນ, ພຣະເຢຊູດຳເນີນພາລະກິດຂອງພຣະອົງຢູ່ໃນຢູດາຍດ້ວຍຕົນເອງ ແລະ ພຣະອົງກໍກາຍເປັນມະນຸດເພື່ອດຳເນີນພາລະກິດ. ຈະຍ້ອນສາເຫດໃດກໍຕາມ, ພາລະກິດນີ້ແມ່ນບໍ່ໄດ້ຂະຫຍາຍອອກນອກອິດສະຣາເອນເລີຍ. ພຣະອົງບໍ່ໄດ້ດຳເນີນພາລະກິດກັບຊາວເອຢິບ ຫຼື ຊາວອິນເດຍ. ພຣະອົງເຄີຍແຕ່ດຳເນີນພາລະກິດກັບຊາວອິດສະຣາເອນເທົ່ານັ້ນ. ສະນັ້ນ ມະນຸດຈຶ່ງມີຄວາມເຂົ້າໃຈຕ່າງໆນາໆ ແລະ ວາງແຜນພາລະກິດຂອງພຣະເຈົ້າພາຍໃນຂອບເຂດບາງຢ່າງ. ພວກເຂົາເລົ່າຂານກັນວ່າເມື່ອພຣະເຈົ້າດຳເນີນພາລະກິດ, ພຣະອົງຕ້ອງດຳເນີນພາລະກິດນັ້ນກັບບັນດາຜູ້ຄົນທີ່ຖືກເລືອກ ແລະ ຢູ່ໃນອິດສະຣາເອນ; ຮັກສາໄວ້ສຳລັບຊາວອິດສະຣາເອນ ພຣະເຈົ້າບໍ່ໄດ້ດຳເນີນພາລະກິດກັບຜູ້ອື່ນ ຫຼື ພຣະອົງບໍ່ມີພາລະກິດໃນຂອບເຂດອື່ນ. ພວກເຂົາຈຶ່ງເຄັ່ງຄັດເປັນພິເສດເພື່ອຮັກສາໃຫ້ພຣະບຸດພຣະເຈົ້າຍັງຄົງຢູ່ໃນເຊື້ອສາຍ ແລະ ບໍ່ອະນຸຍາດໃຫ້ພຣະອົງເຄື່ອນໄຫວອອກນອກດິນແດນອິດສະຣາເອນເລີຍ. ສິ່ງເຫຼົ່ານີ້ບໍ່ແມ່ນຄວາມເຂົ້າໃຈຂອງມະນຸດທັງໝົດບໍ? ພຣະເຈົ້າສ້າງສະຫວັນ ແລະ ໂລກມະນຸດ ແລະ ສ້າງທຸກສິ່ງທຸກຢ່າງ ແລະ ພຣະອົງກໍສ້າງສັບພະສິ່ງທັງປວງ; ແລ້ວພຣະອົງຈະຈຳກັດພາລະກິດຂອງພຣະອົງສະເພາະແຕ່ໃນອິດສະຣາເອນໄດ້ແນວໃດ? ຖ້າເປັນເຊັ່ນນັ້ນ, ຈະມີປະໂຫຍດຫຍັງສຳລັບພຣະອົງໃນການສ້າງສັບພະສິ່ງທັງປວງຂອງພຣະອົງຂຶ້ນມາ? ພຣະອົງສ້າງໂລກທັງໝົດ, ພຣະອົງໄດ້ດຳເນີນແຜນການຄຸ້ມຄອງຫົກພັນປີ ບໍ່ແມ່ນເພື່ອອິດສະຣາເອນເທົ່ານັ້ນ ແຕ່ເພື່ອທຸກຄົນໃນຈັກກະວານ. ບໍ່ວ່າພວກເຂົາຈະອາໄສຢູ່ປະເທດຈີນ, ສະຫະລັດອະເມຣິກາ,

ສະຫະລາຊະອານາຈັກ ຫຼື ຣັດເຊຍ ທຸກຄົນແມ່ນລູກຫຼານຂອງອາດາມ. ພວກເຂົາທັງໝົດແມ່ນຖືກສ້າງຂຶ້ນໂດຍພຣະເຈົ້າ. ບໍ່ມີບຸກຄົນໃດຈະສາມາດຫຼົບໜີອອກຈາກຂອບເຂດການສ້າງຂອງພຣະເຈົ້າໄດ້ ແລະ ບໍ່ມີບຸກຄົນໃດສາມາດແຍກອອກຈາກຄວາມເປັນ "ລູກຫຼານຂອງອາດາມ" ໄດ້. ພວກເຂົາທັງໝົດແມ່ນສິ່ງທີ່ພຣະເຈົ້າສ້າງຂຶ້ນ ພວກເຂົາແມ່ນລູກຫຼານຂອງອາດາມ ແລະ ພວກເຂົາກໍຍັງເປັນລູກຫຼານທີ່ຊົ່ວຊ້າຂອງອາດາມ ແລະ ເອວາອີກດ້ວຍ. ບໍ່ແມ່ນແຕ່ຊາວອິດສະຣາເອນເທົ່ານັ້ນ ທີ່ເປັນຜູ້ຄົນທີ່ພຣະເຈົ້າສ້າງຂຶ້ນ, ແຕ່ແມ່ນໝົດທຸກຄົນ. ພຽງແຕ່ວ່າບາງຄົນໄດ້ຖືກສາບ ແລະ ບາງຄົນໄດ້ຮັບພອນຈາກພຣະເຈົ້າ. ມີຫຼາຍສິ່ງທີ່ເປັນທີ່ເພິ່ງພໍໃຈກ່ຽວກັບຊາວອິດສະຣາເອນ. ເບື້ອງຕົ້ນພຣະເຈົ້າໄດ້ດຳເນີນພາລະກິດກັບພວກເຂົາ ເພາະວ່າພວກເຂົາແມ່ນກຸ່ມຄົນທີ່ເສື່ອມເສຍໜ້ອຍທີ່ສຸດ. ຄົນຈີນບໍ່ອາດປຽບທຽບກັບພວກເຂົາໄດ້ ພວກເຂົາຕໍ່າຕ້ອຍກວ່າ. ສະນັ້ນ, ໃນເບື້ອງຕົ້ນ ພຣະເຈົ້າຈຶ່ງໄດ້ດຳເນີນພາລະກິດກັບຊາວອິດສະຣາເອນກ່ອນ ແລະ ພາລະກິດໃນຂັ້ນຕອນທີ່ສອງຂອງພຣະອົງກໍດຳເນີນຢູ່ໃນຢູດາຍເທົ່ານັ້ນ ເຊິ່ງນຳໄປສູ່ຄວາມເຂົ້າໃຈ ແລະ ກົດເກນຕ່າງໆທ່າມກາງມະນຸດ. ອັນທີ່ຈິງແລ້ວ, ຖ້າພຣະອົງດຳເນີນຕາມຄວາມເຂົ້າໃຈຂອງມະນຸດ, ພຣະອົງກໍຈະເປັນພຽງພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ ແລະ ດັ່ງນັ້ນ ພຣະອົງບໍ່ສາມາດຂະຫຍາຍພາລະກິດຂອງພຣະອົງໄປສູ່ຊາດທີ່ບໍ່ແມ່ນຊາວຢິວໄດ້, ເພາະວ່າພຣະອົງຈະເປັນພຽງພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ ໂດຍບໍ່ແມ່ນພຣະເຈົ້າຂອງທຸກສັບພະສິ່ງທັງປວງ. ຄຳທຳນາຍໄດ້ກ່າວໄວ້ວ່າ ຊື່ສຽງຂອງພຣະເຢໂຮວາຈະຍິ່ງໃຫຍ່ໃນຊາດທີ່ບໍ່ແມ່ນຊາວຢິວ ເຊິ່ງມັນຈະແຜ່ຂະຫຍາຍໄປສູ່ຊາດທີ່ບໍ່ແມ່ນຊາວຢິວ. ເປັນຫຍັງຄຳທຳນາຍຈຶ່ງກ່າວໄວ້ແບບນັ້ນ? ຖ້າພຣະເຈົ້າພຽງແຕ່ເປັນພຣະເຈົ້າຂອງຊາວອິດສະຣາເອນເທົ່ານັ້ນ, ພຣະອົງກໍຈະດຳເນີນພາລະກິດຢູ່ໃນອິດສະຣາເອນເທົ່ານັ້ນ. ຍິ່ງໄປກວ່ານັ້ນ, ພຣະອົງຈະບໍ່ຂະຫຍາຍພາລະກິດຂອງພຣະອົງ ແລະ ພຣະອົງກໍຈະບໍ່ສ້າງຄຳທຳນາຍນີ້ຂຶ້ນມາ. ຍ້ອນວ່າພຣະອົງໄດ້ສ້າງຄຳທຳນາຍນີ້ຂຶ້ນມາ, ພຣະອົງຈຶ່ງຕ້ອງຂະຫຍາຍພາລະກິດຂອງພຣະອົງໄປສູ່ຊົນຊາດທີ່ບໍ່ແມ່ນຊາວຢິວ, ໄປສູ່ທຸກຊາດ ແລະ ໄປທົ່ວທຸກແຜ່ນດິນ. ເພາະວ່າພຣະອົງໄດ້ກ່າວໃນສິ່ງນີ້ໄວ້ແລ້ວ, ພຣະອົງຈຶ່ງປະຕິບັດຕາມຄຳກ່າວຂອງພຣະອົງ. ນີ້ແມ່ນແຜນການຂອງພຣະອົງ, ເພາະພຣະອົງຄືພຣະຜູ້ເປັນເຈົ້າທີ່ສ້າງສະຫວັນ, ສ້າງໂລກມະນຸດ, ສ້າງທຸກສິ່ງທຸກຢ່າງ ແລະ ພຣະອົງເປັນພຣະເຈົ້າຂອງສັບພະສິ່ງທັງປວງ. ບໍ່ວ່າພຣະອົງຈະດຳເນີນພາລະກິດກັບຊາວອິດສະຣາເອນ ຫຼື ໃນທົ່ວດິນແດນຢູດາຍກໍຕາມ, ພາລະກິດທີ່ພຣະອົງກະທຳແມ່ນພາລະກິດຂອງທົ່ວຈັກກະວານ ແລະ ເປັນພາລະກິດຂອງມວນມະນຸດທັງໝົດ. ພາລະກິດທີ່ພຣະອົງດຳເນີນໃນທຸກມື້ນີ້ໃນຊາດມັງກອນແດງທີ່ຍິ່ງໃຫຍ່ ເຊິ່ງກໍຄືໃນຊາດທີ່ບໍ່ແມ່ນຊາວຢິວ ກໍຍັງແມ່ນພາລະກິດຂອງມວນມະນຸດທັງໝົດ. ອິດສະຣາເອນສາມາດເປັນຖານສຳລັບພາລະກິດຂອງພຣະອົງໃນໂລກ; ໃນທຳນອງດຽວກັນ, ປະເທດຈີນກໍສາມາດກາຍເປັນຖານສຳລັບພາລະກິດຂອງພຣະອົງໃນບັນດາຊາດທີ່ບໍ່ແມ່ນຊາວຢິວໄດ້ເຊັ່ນກັນ. ແລ້ວຕອນນີ້ພຣະອົງບໍ່ແມ່ນປະຕິບັດຕາມຄຳທຳນາຍທີ່ວ່າ "ຊື່ສຽງຂອງພຣະເຢໂຮວາຈະຍິ່ງໃຫຍ່ໃນປະເທດທີ່ບໍ່ແມ່ນຊາວຢິວນັ້ນບໍ"? ຂັ້ນຕອນທຳອິດໃນພາລະກິດຂອງພຣະອົງທີ່ປະຕິບັດໃນບັນດາຊາດທີ່ບໍ່ແມ່ນຊາວຢິວແມ່ນໝາຍເຖິງພາລະກິດນີ້, ພາລະກິດທີ່ພຣະອົງ

ກໍາລັງປະຕິບັດໃນຊາດມັງກອນແດງທີ່ຍິ່ງໃຫຍ່ນີ້. ເພື່ອໃຫ້ພຣະບຸດຂອງພຣະເຈົ້າດໍາເນີນພາລະກິດໃນດິນແດນນີ້ ແລະ ດໍາເນີນພາລະກິດກັບຜູ້ຄົນທີ່ຖືກສາບເຫຼົ່ານີ້ ເຖິງແມ່ນວ່າມັນເປັນສິ່ງທີ່ຂ້ອນຂ້າງຈະກົງກັນຂ້າມກັບຄວາມເຂົ້າໃຈຂອງມະນຸດກໍຕາມ. ຜູ້ຄົນເຫຼົ່ານີ້ແມ່ນຊົ່ວຊ້າທີ່ສຸດ, ພວກເຂົາບໍ່ມີຄ່າ ແລະ ພວກເຂົາກໍຖືກພຣະເຢໂຮວາປະຖິ້ມໃນເບື້ອງຕົ້ນ. ຜູ້ຄົນສາມາດຖືກຄົນອື່ນປະຖິ້ມໄດ້, ແຕ່ຖ້າພວກເຂົາຖືກພຣະເຈົ້າປະຖິ້ມ, ຜູ້ຄົນເຫຼົ່ານີ້ຈະບໍ່ມີສະຖານະຫຍັງ ແລະ ພວກເຂົາຈະມີຄຸນຄ່າຕໍ່າທີ່ສຸດ. ສໍາລັບສ່ວນໜຶ່ງຂອງການຖືກສ້າງຂຶ້ນມາຂອງພຣະເຈົ້າທີ່ຖືກຄອບງໍາໂດຍຊາຕານ ຫຼື ການທີ່ຖືກຄົນອື່ນປະຖິ້ມ ແມ່ນລ້ວນແລ້ວແຕ່ເປັນເລື່ອງທີ່ເຈັບປວດຢູ່ແລ້ວ, ແຕ່ຖ້າສ່ວນໜຶ່ງຂອງການຖືກສ້າງຂຶ້ນມາຖືກພຣະຜູ້ເປັນເຈົ້າທີ່ສ້າງສັບພະສິ່ງທັງປວງນັ້ນປະຖິ້ມ ໝາຍຄວາມວ່າ ສະຖານະຂອງບຸກຄົນນັ້ນແມ່ນຕໍ່າຕ້ອຍທີ່ສຸດ. ເຊື້ອສາຍຂອງໂມອາບຖືກສາບແຊ່ງ ແລະ ພວກເຂົາເກີດໃນປະເທດທີ່ຫຼ້າຫຼັງນີ້; ໂດຍບໍ່ຕ້ອງສົງໄສ, ທຸກຄົນຢູ່ພາຍໃຕ້ອິດທິພົນຂອງຄວາມມືດມົວ, ລູກຫຼານຂອງໂມອັບມີສະຖານະທີ່ຕໍ່າຕ້ອຍທີ່ສຸດ. ເພາະວ່າຜູ້ຄົນເຫຼົ່ານີ້ມີສະຖານະຕໍ່າທີ່ສຸດໃນອະດີດຜ່ານມາ, ພາລະກິດທີ່ປະຕິບັດເຮັດຕໍ່ພວກເຂົາແມ່ນສາມາດລົບລ້າງແນວຄວາມເຊື່ອຂອງມະນຸດໄດ້ ແລະ ຍັງເປັນພາລະກິດທີ່ເປັນປະໂຫຍດທີ່ສຸດຕໍ່ກັບແຜນການຄຸ້ມຄອງຫົກພັນປີຂອງພຣະອົງອີກ. ການດໍາເນີນພາລະກິດກັບຜູ້ຄົນເຫຼົ່ານີ້ ແມ່ນການກະທໍາທີ່ສາມາດລົບລ້າງແນວຄວາມເຊື່ອຂອງມະນຸດ. ດ້ວຍເຫດນີ້ພຣະອົງຈຶ່ງເປີດຍຸກໃໝ່, ດ້ວຍເຫດນີ້ພຣະອົງຈຶ່ງລົບລ້າງຄວາມເຊື່ອຂອງມະນຸດທັງໝົດ, ດ້ວຍເຫດນີ້ ພຣະອົງຈຶ່ງຢຸດຕິພາລະກິດຂອງຍຸກແຫ່ງພຣະກະລຸນາທັງໝົດ. ພາລະກິດຂອງພຣະອົງແມ່ນໄດ້ດໍາເນີນໃນຢູດາຍພາຍໃນຂອບເຂດຂອງອິດສະຣາເອນ, ໃນຊາດທີ່ບໍ່ແມ່ນຊາວຢິວ ພຣະອົງບໍ່ໄດ້ເຮັດພາລະກິດເປີດຍຸກໃໝ່ໃດໆທັງນັ້ນ. ຂັ້ນຕອນສຸດທ້າຍຂອງພາລະກິດຂອງພຣະອົງບໍ່ພຽງແຕ່ຖືກດໍາເນີນຕໍ່ກັບຜູ້ຄົນໃນຊາດທີ່ບໍ່ແມ່ນຊາວຢິວເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນແມ່ນຖືກດໍາເນີນໃນຜູ້ຄົນທີ່ຖືກສາບອີກດ້ວຍ. ເຫດຜົນອັນດຽວນີ້ສາມາດເຮັດໃຫ້ຊາຕານຂາຍໜ້າໄດ້. ສະນັ້ນພຣະເຈົ້າຈຶ່ງ “ກາຍເປັນ” ພຣະເຈົ້າທີ່ສ້າງສັບພະສິ່ງທັງປວງໃນຈັກກະວານນີ້, ພຣະຜູ້ເປັນເຈົ້າຂອງທຸກສິ່ງ, ເປັນສິ່ງບູຊາສໍາລັບທຸກສິ່ງທຸກຢ່າງໃນຊີວິດ.

ໃນປັດຈຸບັນ ມີບາງຄົນທີ່ຍັງບໍ່ທັນເຂົ້າໃຈວ່າ ພຣະເຈົ້າໄດ້ດໍາເນີນພາລະກິດໃໝ່ຫຍັງແນ່. ໃນທ່າມກາງຊາດທີ່ບໍ່ແມ່ນຊາວຢິວ ພຣະເຈົ້າໄດ້ສ້າງການເລີ່ມຕົ້ນໃໝ່. ພຣະອົງໄດ້ເລີ່ມເປີດຍຸກໃໝ່ ແລະ ໄດ້ເລີ່ມພາລະກິດໃໝ່ອີກ ແລະ ພຣະອົງ ດໍາເນີນພາລະກິດນີ້ໃນກຸ່ມລູກຫຼານຂອງໂມອັບ. ແລ້ວນີ້ບໍ່ແມ່ນພາລະກິດໃໝ່ສຸດຂອງພຣະອົງບໍ? ບໍ່ມີຜູ້ໃດໃນຍຸກໃດກໍຕາມທີ່ເຄີຍປະສົບກັບພາລະກິດແບບນີ້ມາກ່ອນ. ບໍ່ມີຄົນໃດເຄີຍໄດ້ຍິນກ່ຽວກັບວຽກງານດັ່ງກ່າວນີ້, ນັບພາສາຫຍັງຈະເຄີຍມີຄວາມປິຕິຍິນດີກັບມັນ. ສະຕິປັນຍາຂອງພຣະເຈົ້າ, ຄວາມມະຫັດສະຈັນຂອງພຣະເຈົ້າ, ຄວາມລໍ້າລຶກຂອງພຣະເຈົ້າທີ່ບໍ່ອາດເຂົ້າໃຈໄດ້, ຄວາມຍິ່ງໃຫຍ່ຂອງພຣະເຈົ້າ ແລະ ລັດສະໝີພາບຂອງພຣະເຈົ້າແມ່ນຖືກສໍາແດງຜ່ານຂັ້ນຕອນພາລະກິດໃນຍຸກສຸດທ້າຍນີ້. ແລ້ວນີ້ບໍ່ແມ່ນພາລະກິດໃໝ່ທີ່ລົບລ້າງຄວາມເຊື່ອຂອງມະນຸດບໍ? ຍັງມີຜູ້ຄົນເຫຼົ່ານັ້ນທີ່ຄິດແບບນັ້ນຢູ່ວ່າ: “ເພາະວ່າພຣະເຈົ້າໄດ້ສາບໂມອັບ ແລະ ບອກວ່າພຣະອົງຈະປະຖິ້ມລູກຫຼານຂອງໂມອັບ, ແລ້ວພຣະອົງຈະຊ່ວຍພວກເຂົາໃຫ້ລອດພົ້ນໄດ້ແນວໃດໃນ

ຕອນນີ້?" ພວກເຂົາແມ່ນຜູ້ຄົນຈາກຊາດທີ່ບໍ່ແມ່ນຊາວຢິວທີ່ຖືກສາບ ແລະ ຖືກບັງຄັບໃຫ້ອອກຈາກອິດສະຣາເອນ. ຊາວອິດສະຣາເອນເອີ້ນພວກເຂົາວ່າ "ໝາຕ່າງຊາດ". ໃນມຸມມອງຂອງທຸກຄົນ, ພວກເຂົາບໍ່ພຽງແຕ່ແມ່ນໝາຕ່າງຊາດເທົ່ານັ້ນ, ແຕ່ຮ້າຍໄປກວ່ານັ້ນ ພວກເຂົາຄືລູກແຫ່ງຄວາມວິນາດ. ເວົ້າອີກຢ່າງຄື ພວກເຂົາບໍ່ແມ່ນຜູ້ຄົນທີ່ພຣະເຈົ້າເລືອກ. ເຖິງແມ່ນວ່າພວກເຂົາຈະກຳເນີດຢູ່ພາຍໃນດິນແດນອິດສະຣາເອນກໍຕາມ, ພວກເຂົາກໍບໍ່ແມ່ນສ່ວນໜຶ່ງຂອງຄົນອິດສະຣາເອນ. ພວກເຂົາຖືກຂັບໄລ່ໄປຢູ່ຊາດທີ່ບໍ່ແມ່ນຊາດຢິວ. ພວກເຂົາແມ່ນຜູ້ຄົນທີ່ຕໍ່າຕ້ອຍທີ່ສຸດ. ສາເຫດອັນແທ້ຈິງແມ່ນຍ້ອນວ່າ ພວກເຂົາແມ່ນຜູ້ຄົນທີ່ຕໍ່າຕ້ອຍທີ່ສຸດໃນມວນມະນຸດທີ່ພຣະເຈົ້າດຳເນີນພາລະກິດຂອງພຣະອົງໃນການເປີດຍຸກໃໝ່ໃນໝູ່ພວກເຂົາ ເພາະວ່າພວກເຂົາເປັນຕົວແທນຄວາມຊົ່ວຮ້າຍຂອງມະນຸດຊາດ. ພາລະກິດຂອງພຣະເຈົ້າແມ່ນການຄັດເລືອກ ແລະ ມີຈຸດປະສົງ, ພາລະກິດທີ່ພຣະອົງດຳເນີນໃນກຸ່ມຄົນເຫຼົ່ານີ້ໃນທຸກມື້ນີ້ ແມ່ນສ່ວນໜຶ່ງຂອງພາລະກິດທີ່ດຳເນີນໃນທ່າມກາງການເນລະມິດສ້າງ. ໂນອາກໍແມ່ນສ່ວນໜຶ່ງຂອງການເນລະມິດສ້າງຂອງພຣະເຈົ້າ ເຊັ່ນດຽວກັນກັບລູກຫຼານຂອງເຂົາ. ທຸກຄົນໃນໂລກນີ້ທີ່ມີເນື້ອໜັງ ແລະ ເລືອດແມ່ນການເນລະມິດສ້າງຂອງພຣະເຈົ້າ. ພາລະກິດຂອງພຣະເຈົ້າແມ່ນແນໃສ່ການເນລະມິດສ້າງທັງໝົດ. ບໍ່ແມ່ນດຳເນີນອີງຕາມວ່າ ຜູ້ໃດຖືກສາບ ຫຼື ບໍ່ຖືກສາບພາຍຫຼັງຖືກສ້າງ. ພາລະກິດການຄຸ້ມຄອງຂອງພຣະອົງແມ່ນແນໃສ່ການສ້າງສັບພະສິ່ງທັງປວງ, ບໍ່ແມ່ນສະເພາະແຕ່ຜູ້ທີ່ຖືກເລືອກເຫຼົ່ານັ້ນ ທີ່ບໍ່ໄດ້ຖືກສາບ. ໃນເມື່ອພຣະເຈົ້າຕ້ອງການດຳເນີນພາລະກິດຂອງພຣະອົງທ່າມກາງການເນລະມິດສ້າງຂອງພຣະອົງ, ພຣະອົງຈະດຳເນີນມັນໃຫ້ສຳເລັດຜົນແນ່ນອນ ແລະ ພຣະອົງຈະດຳເນີນພາລະກິດໃນບັນດາຜູ້ຄົນທີ່ເປັນປະໂຫຍດ ຕໍ່ພາລະກິດຂອງພຣະອົງ. ສະນັ້ນ, ພຣະອົງຈະລົບລ້າງທຸກວິທີການ ເມື່ອພຣະອົງປະຕິບັດພາລະກິດທ່າມກາງຜູ້ຄົນ. ສຳລັບພຣະອົງ, ຄຳວ່າ "ຖືກສາບ", "ຖືກລົງໂທດ" ແລະ "ໄດ້ຮັບພອນ" ແມ່ນບໍ່ມີຄວາມໝາຍ! ຊາວຢິວເປັນຄົນດີ ເໝືອນດັ່ງຜູ້ຄົນທີ່ຖືກເລືອກຂອງອິດສະຣາເອນ. ພວກເຂົາແມ່ນຄົນທີ່ມີຄວາມສາມາດ ແລະ ມີມະນຸດສະທຳທີ່ດີ. ໃນເບື້ອງຕົ້ນ ພຣະເຢໂຮວາໄດ້ເລີ່ມພາລະກິດຂອງພຣະອົງໃນກຸ່ມພວກເຂົາ ແລະ ໄດ້ດຳເນີນພາລະກິດເບື້ອງຕົ້ນຂອງພຣະອົງ, ແຕ່ການປະຕິບັດພາລະກິດແຫ່ງການເອົາຊະນະຈິດໃຈໃນຕອນນີ້ຈະບໍ່ມີຄວາມໝາຍຫຍັງ. ພວກເຂົາກໍເປັນສ່ວນໜຶ່ງຂອງການສ້າງເຊັ່ນກັນ ແລະ ມີຫຼາຍດ້ານທີ່ດີກ່ຽວກັບພວກເຂົາ, ແຕ່ມັນຈະບໍ່ມີຄວາມໝາຍຫຍັງໃນການດຳເນີນພາລະກິດໃນຂັ້ນຕອນນີ້ຕໍ່ພວກເຂົາເລີຍ. ພຣະອົງຈະບໍ່ສາມາດເອົາຊະນະໃຈຜູ້ຄົນໄດ້ ຫຼື ພຣະອົງຈະບໍ່ສາມາດເຮັດໃຫ້ສັບພະສິ່ງທັງປວງທີ່ຖືກສ້າງຂຶ້ນເຊື່ອພຣະອົງໄດ້. ນີ້ແມ່ນຈຸດສຳຄັນຂອງການເຜີຍແຜ່ພາລະກິດຂອງພຣະອົງໄປສູ່ຜູ້ຄົນເຫຼົ່ານີ້ໃນຊາດມັງກອນແດງທີ່ຍິ່ງໃຫຍ່. ຄວາມໝາຍເລິກເຊິ່ງທີ່ແທ້ຈິງໃນທີ່ນີ້ແມ່ນການເປີດຍຸກໃໝ່ຂອງພຣະອົງ, ການລົບລ້າງກົດເກນທັງໝົດ ແລະ ການລົບລ້າງຄວາມເຊື່ອຂອງມະນຸດທັງໝົດຂອງພຣະອົງ ແລະ ການສິ້ນສຸດພາລະກິດຂອງຍຸກແຫ່ງຄວາມກະລຸນາທັງໝົດອີກດ້ວຍ. ຖ້າວ່າພາລະກິດໃນປັດຈຸບັນຂອງພຣະອົງຖືກດຳເນີນຕໍ່ຊາວອິດສະຣາເອນຈົນເຖິງເວລາແຜນການຄຸ້ມຄອງຫົກພັນປີຂອງພຣະອົງສິ້ນສຸດລົງ, ທຸກຄົນກໍຄົງຈະເຊື່ອວ່າພຣະເຈົ້າແມ່ນເປັນພຽງພຣະເຈົ້າ

ຂອງຊາວອິດສະຣາເອນເທົ່ານັ້ນ, ມີແຕ່ຊາວອິດສະຣາເອນເທົ່ານັ້ນທີ່ເປັນຜູ້ຄົນທີ່ພຣະເຈົ້າເລືອກ, ແລ້ວກໍມີແຕ່ຊາວອິດສະຣາເອນເທົ່ານັ້ນທີ່ສົມຄວນໄດ້ຮັບພອນ ແລະ ຄໍາສັນຍາຂອງພຣະອົງ. ໃນລະຫວ່າງຍຸກສຸດທ້າຍ, ພຣະບຸດພຣະເຈົ້າໄດ້ກັບລົງມາປະຕິບັດພາລະກິດຂອງພຣະອົງໃນຊາດທີ່ບໍ່ແມ່ນຊາວຢິວໃນປະເທດຂອງມັງກອນແດງທີ່ຍິ່ງໃຫຍ່; ພຣະອົງໄດ້ສໍາເລັດພາລະກິດຂອງພຣະອົງໃນຖານະເປັນພຣະເຈົ້າທີ່ສ້າງສັບພະສິ່ງທັງປວງ. ພຣະອົງໄດ້ສໍາເລັດພາລະກິດຄຸ້ມຄອງຂອງພຣະອົງທັງໝົດ ແລະພຣະອົງຈະສໍາເລັດສ່ວນສໍາຄັນໃນພາລະກິດຂອງພະອົງໃນຊາດມັງກອນແດງທີ່ຍິ່ງໃຫຍ່. ສິ່ງອັນສໍາຄັນຂອງສາມຂັ້ນຕອນຂອງພາລະກິດເຫຼົ່ານີ້ແມ່ນການໄຖ່ບາບໃຫ້ມະນຸດ, ເຊັ່ນ: ການເຮັດໃຫ້ສັບພະສິ່ງທັງປວງບູຊາພຣະຜູ້ເປັນເຈົ້າຜູ້ເຮັດການເນລະມິດສ້າງ. ສະນັ້ນ, ທຸກຂັ້ນຕອນຂອງພາລະກິດດັ່ງກ່າວນີ້ຈຶ່ງມີຄວາມໝາຍສໍາຄັນຫຼາຍ; ພຣະເຈົ້າຈະບໍ່ເຮັດໃນສິ່ງທີ່ບໍ່ມີຄວາມໝາຍ ຫຼື ບໍ່ມີຄຸນຄ່າຢ່າງເດັດຂາດ. ໃນທາງກົງກັນຂ້າມ, ຂັ້ນຕອນພາລະກິດນີ້ປະກອບດ້ວຍການເປີດຍຸກໃໝ່ ແລະ ການສິ້ນສຸດສອງຍຸກທີ່ຜ່ານມາ; ໃນອີກດ້ານໜຶ່ງ ກໍປະກອບດ້ວຍການລົບລ້າງຄວາມເຊື່ອຂອງມະນຸດ ແລະລົບລ້າງຄວາມເຊື່ອ ແລະ ຄວາມເຂົ້າໃຈດັ່ງເດີມຂອງມະນຸດທັງໝົດ. ພາລະກິດຂອງສອງຂັ້ນຕອນໃນເມື່ອກ່ອນແມ່ນຖືກດໍາເນີນໂດຍອີງຕາມຄວາມເຊື່ອຂອງມະນຸດໃນຍຸກນັ້ນ. ຢ່າງໃດກໍຕາມ, ຂັ້ນຕອນນີ້ແມ່ນເພື່ອລົບລ້າງຄວາມເຊື່ອຂອງມະນຸດໃຫ້ໝົດສິ້ນ ເພື່ອເອົາຊະນະໃຈຂອງມະນຸດຊາດທັງໝົດ. ໂດຍການນໍາໃຊ້ໄຊຊະນະ ທີ່ມີຕໍ່ລູກຫຼານຂອງໂມອັບ ແລະ ການນໍາໃຊ້ພາລະກິດທີ່ຖືກດໍາເນີນຕໍ່ລູກຫຼານຂອງໂມອັບ, ພຣະເຈົ້າຈະເອົາຊະນະໃຈຂອງມະນຸດທັງໝົດໃນທົ່ວຈັກກະວານ. ນີ້ແມ່ນຈຸດສໍາຄັນເລິກເຊິ່ງທີ່ແທ້ຈິງຂອງຂັ້ນຕອນພາລະກິດນີ້ຂອງພຣະອົງ ແລະ ນີ້ຄືດ້ານໜຶ່ງທີ່ມີຄຸນຄ່າທີ່ສຸດຂອງຂັ້ນຕອນພາລະກິດນີ້ຂອງພຣະອົງ. ເຖິງແມ່ນວ່າ ຕອນນີ້ ພວກເຈົ້າຈະຮູ້ວ່າ ສະຖານະຂອງພວກເຈົ້າຕໍ່າຕ້ອຍ ແລະ ມີຄຸນຄ່າຕໍ່າກໍຕາມ, ແຕ່ພວກເຈົ້າຈະຮູ້ສຶກວ່າ ພວກເຈົ້າໄດ້ພົບກັບສິ່ງທີ່ໜ້າຍິນດີທີ່ສຸດ: ພວກເຈົ້າໄດ້ຮັບພອນທີ່ຍິ່ງໃຫຍ່, ໄດ້ຮັບການສັນຍາທີ່ດີເລີດ ແລະ ພວກເຈົ້າຈະສາມາດເຮັດສໍາເລັດພາລະກິດທີ່ຍິ່ງໃຫຍ່ນີ້ຂອງພຣະເຈົ້າໄດ້ ແລະ ພວກເຈົ້າຈະສາມາດເຫັນໂສມໜ້າທີ່ແທ້ຈິງຂອງພຣະເຈົ້າ, ຮູ້ຈັກລັກສະນະນິໄສຂອງພຣະເຈົ້າ ແລະ ປະຕິບັດຕາມຈຸດປະສົງຂອງພຣະເຈົ້າ. ສອງຂັ້ນຕອນພາລະກິດຜ່ານມາຂອງພຣະເຈົ້າທີ່ໄດ້ດໍາເນີນຢູ່ໃນອິດສະຣາເອນ. ຖ້າຂັ້ນຕອນພາລະກິດນີ້ຂອງພຣະອົງໃນຊ່ວງຍຸກສຸດທ້າຍຍັງດໍາເນີນຕໍ່ຊາວອິດສະຣາເອນຢູ່ຄືເກົ່າ, ບໍ່ພຽງແຕ່ມະນຸດທີ່ຖືກສ້າງຂຶ້ນທຸກຄົນຈະເຊື່ອວ່າ ມີພຽງແຕ່ຊາວອິດສະຣາເອນເທົ່ານັ້ນແມ່ນຜູ້ຄົນທີ່ຖືກເລືອກຂອງພຣະເຈົ້າ, ແຕ່ນອກນັ້ນແຜນການຄຸ້ມຄອງທັງໝົດຂອງພຣະເຈົ້າກໍຈະບໍ່ໄດ້ຮັບຜົນຕາມທີ່ປາດຖະໜາອີກດ້ວຍ. ໃນຊ່ວງສອງຂັ້ນຕອນພາລະກິດຂອງພຣະອົງທີ່ດໍາເນີນຢູ່ໃນອິດສະຣາເອນນັ້ນ, ບໍ່ເຄີຍມີການດໍາເນີນພາລະກິດໃໝ່ໃດໆ ຫຼື ບໍ່ມີພາລະກິດເປີດຍຸກໃດຂອງພຣະເຈົ້າໄດ້ຖືກດໍາເນີນຢູ່ໃນຊາດທີ່ບໍ່ແມ່ນຊາວຢິວ. ຂັ້ນຕອນຂອງພາລະກິດທຸກມື້ນີ້ຄືພາລະກິດເປີດຍຸກໃໝ່ແມ່ນດໍາເນີນຄັ້ງທໍາອິດທ່າມກາງຊາດທີ່ບໍ່ແມ່ນຊາວຢິວ ແລະ ນອກນັ້ນ ກໍເປັນຂັ້ນຕອນທໍາອິດທີ່ໄດ້ຖືກດໍາເນີນຕໍ່ລູກຫຼານຂອງໂມອັບ. ນີ້ແປວ່າໄດ້ເປີດຂັ້ນຕອນຍຸກໃໝ່ທັງໝົດ. ພຣະເຈົ້າໄດ້ລົບລ້າງຄວາມເຊື່ອຕ່າງໆທີ່ມີຢູ່ໃນແນວ

ຄວາມຄິດຂອງມະນຸດ ແລະ ບໍ່ອະນຸຍາດໃຫ້ມີຄວາມເຊື່ອໃດໆສືບຕໍ່ໄປອີກ. ໃນພາລະກິດຂອງພຣະອົງເພື່ອເອົາຊະນະໃຈ, ພຣະອົງໄດ້ລົບລ້າງຄວາມເຊື່ອຂອງມະນຸດ ເຊິ່ງກໍຄືຄວາມເຊື່ອເກົ່າ ແລະ ດັ່ງເດີມຂອງມະນຸດ. ພຣະອົງເຮັດໃຫ້ຜູ້ຄົນເຫັນວ່າ ເວລາຢູ່ກັບພຣະເຈົ້າແລ້ວແມ່ນບໍ່ມີກົດເກນໃດໆ, ບໍ່ມີສິ່ງໃດກ່ຽວກັບພຣະເຈົ້າທີ່ເປັນສິ່ງເກົ່າໆ, ພາລະກິດທີ່ພຣະອົງກະທຳແມ່ນເປັນອິດສະຫຼະ, ເສລີ ແລະ ທຸກການກະທຳຂອງພຣະອົງແມ່ນມີຄວາມຊອບທຳສະເໝີ. ພວກເຈົ້າຕ້ອງຍອມຮັບໃນພາລະກິດທີ່ພຣະອົງກະທຳຕໍ່ກັບທຸກສັບພະສິ່ງ. ພາລະກິດໃດໜຶ່ງທີ່ພຣະອົງກະທຳລ້ວນແລ້ວແຕ່ມີຄວາມໝາຍ ແລະ ໄດ້ກະທຳຕາມຄວາມປະສົງ ແລະ ສະຕິປັນຍາຂອງພຣະອົງ ແລະ ບໍ່ແມ່ນກະທຳຕາມການຕັດສິນໃຈ ແລະ ຄວາມເຊື່ອຂອງມະນຸດ. ພຣະອົງກະທຳໃນສິ່ງທີ່ເປັນປະໂຫຍດຕໍ່ພາລະກິດຂອງພຣະອົງ; ຖ້າສິ່ງໃດທີ່ບໍ່ເປັນປະໂຫຍດຕໍ່ພາລະກິດຂອງພຣະອົງ, ພຣະອົງຈະບໍ່ກະທຳມັນ ບໍ່ວ່າສິ່ງເຫຼົ່ານັ້ນຈະດີພຽງໃດກໍຕາມ! ພຣະອົງດຳເນີນພາລະກິດ ແລະ ຄັດເລືອກເອົາຜູ້ຮັບ ແລະ ສະຖານທີ່ສຳລັບພາລະກິດຂອງພຣະອົງຕາມຄວາມໝາຍ ແລະ ຈຸດປະສົງຂອງພາລະກິດຂອງພຣະອົງ. ພຣະອົງບໍ່ຍຶດຕິດກັບກົດເກນໃນອະດີດ ແລະ ບໍ່ປະຕິບັດຕາມຫຼັກການເກົ່າ; ແຕ່ພຣະອົງຈະວາງແຜນພາລະກິດຂອງພຣະອົງ ຕາມຄວາມສຳຄັນຂອງພາລະກິດ. ໃນທີ່ສຸດ ພຣະອົງກໍຕ້ອງການບັນລຸຜົນທີ່ແທ້ຈິງ ແລະ ຈຸດປະສົງທີ່ຄາດໄວ້. ມາເຖິງຕອນນີ້ ຖ້າພວກເຈົ້າບໍ່ເຂົ້າໃຈໃນສິ່ງເຫຼົ່ານີ້, ພາລະກິດນີ້ກໍຈະບໍ່ບັນລຸຜົນໃດໆຕໍ່ກັບພວກເຈົ້າ.

# ເຈົ້າຢືນຢູ່ຈຸດໃດໃນຈົດໝາຍສິບສາມສະບັບ?

ພຣະສັນຍາໃໝ່ຂອງພຣະຄຳພີປະກອບມີຈົດໝາຍຂອງໂປໂລສິບສາມສະບັບ. ຕະຫຼອດເວລາທີ່ເພິ່ນປະຕິບັດພາລະກິດຂອງເພິ່ນ, ໂປໂລຂຽນຈົດໝາຍສິບສາມສະບັບນີ້ໃຫ້ກັບຄຣິດຕະຈັກທີ່ເຊື່ອໃນພຣະເຢຊູຄຣິດ. ນັ້ນກໍຄື ໂປໂລຖືກຍົກຂຶ້ນ ແລະ ຂຽນຈົດໝາຍເຫຼົ່ານີ້ຂຶ້ນຫຼັງຈາກທີ່ພຣະເຢຊູສະເດັດຂຶ້ນສູ່ສະຫວັນ. ຈົດໝາຍຂອງເພິ່ນເປັນຄຳພະຍານໃຫ້ກັບການຟື້ນຄືນຊີບ ແລະ ການຂຶ້ນສູ່ສະຫວັນຂອງພຣະເຢຊູເຈົ້າຫຼັງຈາກການຕາຍຂອງພຣະອົງ ແລະ ຈົດໝາຍເຫຼົ່ານີ້ຍັງໄດ້ຂະຫຍາຍຫົນທາງແຫ່ງການກັບໃຈ ແລະ ການແບກໄມ້ກາງແຂນ. ແນ່ນອນ ຂໍ້ຄວາມ ແລະ ຄຳພະຍານເຫຼົ່ານີ້ລ້ວນແລ້ວແຕ່ແມ່ນເພື່ອສັ່ງສອນອ້າຍເອື້ອຍນ້ອງໃນສະຖານທີ່ຕ່າງໆໃນຢູດາຍໃນເວລານັ້ນ, ເພາະໃນເວລານັ້ນໂປໂລເປັນຄົນຮັບໃຊ້ຂອງພຣະເຢຊູເຈົ້າ ແລະ ເພິ່ນຖືກຍົກຂຶ້ນໃຫ້ເປັນພະຍານໃຫ້ກັບພຣະເຢຊູເຈົ້າ. ໃນແຕ່ລະໄລຍະຂອງພາລະກິດຂອງພຣະວິນຍານບໍລິສຸດນັ້ນ ຫຼາກຫຼາຍຜູ້ຄົນຖືກຍົກຂຶ້ນເພື່ອປະຕິບັດພາລະກິດທີ່ແຕກຕ່າງຂອງພຣະອົງ ນັ້ນກໍຄື ເພື່ອປະຕິບັດພາລະກິດຂອງອັກຄະສາວົກ ເພື່ອສືບຕໍ່ພາລະກິດທີ່ພຣະເຈົ້າໄດ້ເຮັດໃຫ້ສຳເລັດດ້ວຍຕົວພຣະອົງເອງ. ຖ້າພຣະວິນຍານບໍລິສຸດປະຕິບັດພາລະກິດນັ້ນໂດຍກົງ ແລະ ບໍ່ມີຄົນໃດຖືກຍົກຂຶ້ນ, ແລ້ວມັນກໍຈະຍາກຫຼາຍໃນການປະຕິບັດພາລະກິດ. ຍ້ອນແບບນັ້ນ, ໂປໂລຈຶ່ງກາຍເປັນຄົນທີ່ຖືກຕີໃຫ້ລົ້ມລົງໃນຂະນະທີ່ກຳລັງເດີນທາງສູ່ເມືອງດາມັສກັດ ແລະຫຼັງຈາກນັ້ນກໍຖືກຍົກຂຶ້ນໃຫ້ເປັນພະຍານໃຫ້ກັບພຣະເຢຊູເຈົ້າ. ເພິ່ນເປັນອັກຄະສາວົກທີ່ຢູ່ນອກສາວົກສິບສອງຄົນຂອງພຣະເຢຊູ. ນອກຈາກການເຜີຍແຜ່ຂ່າວປະເສີດ, ເພິ່ນຍັງຮັບພາລະກິດໃນການດູແລຄຣິດຕະຈັກໃນສະຖານທີ່ຕ່າງໆ ເຊິ່ງປະກອບມີການເບິ່ງແຍງອ້າຍເອື້ອຍນ້ອງໃນຄຣິດຕະຈັກ, ເວົ້າອີກຢ່າງກໍຄື ນຳພາອ້າຍເອື້ອຍນ້ອງສູ່ພຣະຜູ້ເປັນເຈົ້າ. ຄຳພະຍານຂອງໂປໂລແມ່ນເພື່ອເຮັດໃຫ້ຄວາມຈິງທີ່ພຣະເຢຊູເຈົ້າຟື້ນຄືນ ແລະ ຂຶ້ນສູ່ສະຫວັນນັ້ນເປັນທີ່ຮູ້ຈັກ ພ້ອມທັງສັ່ງສອນຜູ້ຄົນໃຫ້ກັບໃຈ, ສາລະພາບ ແລະ ຍ່າງຕາມເສັ້ນທາງແຫ່ງໄມ້ກາງແຂນ. ເພິ່ນເປັນໜຶ່ງໃນພະຍານຂອງພຣະເຢຊູຄຣິດໃນເວລານັ້ນ.

ຈົດໝາຍສິບສາມສະບັບຂອງໂປໂລແມ່ນຖືກຄັດເລືອກເພື່ອນຳໃຊ້ໃນພຣະຄຳພີ. ເພິ່ນຂຽນຈົດໝາຍທັງສິບສາມສະບັບ ເພື່ອນຳສະເໜີສະພາວະທີ່ແຕກຕ່າງກັນຂອງຜູ້ຄົນໃນສະຖານທີ່ຕ່າງໆ. ເພິ່ນໄດ້ຮັບການດົນບັນດານຈາກພຣະວິນຍານບໍລິສຸດໃຫ້ຂຽນສິ່ງເຫຼົ່ານີ້ອອກມາ ແລະ ສັ່ງສອນອ້າຍເອື້ອຍນ້ອງທີ່ຢູ່ໃນທຸກຫົນແຫ່ງຈາກຕຳແໜ່ງອັກຄະສາວົກ (ຈາກຈຸດຢືນຂອງຄົນຮັບໃຊ້ຂອງພຣະເຢຊູເຈົ້າ). ສະນັ້ນ ຈົດໝາຍຂອງໂປໂລບໍ່ໄດ້ເກີດມາຈາກຄຳທຳນາຍ ຫຼື ມາຈາກນິມິດໂດຍກົງ, ແຕ່ມາຈາກພາລະກິດທີ່ເພິ່ນໄດ້ຮັບ. ຈົດໝາຍເຫຼົ່ານີ້ບໍ່ແມ່ນສິ່ງທີ່ແປກປະຫຼາດ ຫຼື ພວກມັນບໍ່ໄດ້ເຂົ້າໃຈຍາກຄືກັບຄຳທຳນາຍ. ຄຳເວົ້າເຫຼົ່ານີ້ເປັນພຽງຕົວໜັງສື ແລະ ບໍ່ໄດ້ປະກອບມີຄຳທຳນາຍ ຫຼື ສິ່ງເລິກລັບ; ພວກມັນພຽງແຕ່ມີຄຳເວົ້າສັ່ງສອນທຳມະດາ. ເຖິງແມ່ນວ່າ ມີຫຼາຍຄຳເວົ້າທີ່ຜູ້ຄົນອາດຢັ່ງເຖິງໄດ້ຍາກ ຫຼື ເຂົ້າໃຈຍາກ, ພວກມັນກໍເກີດຈາກການຕີຄວາມໝາຍຂອງໂປໂລເອງ ແລະ ຈາກ

ແສງສະຫວ່າງຂອງພຣະວິນຍານບໍລິສຸດ. ໂປໂລເປັນພຽງອັກຄະສາວົກ; ເພິ່ນເປັນຄົນຮັບໃຊ້ທີ່ຖືກພຣະເຢຊູເຈົ້າໃຊ້, ບໍ່ແມ່ນຜູ້ປະກາດພຣະທຳ. ໃນຂະນະທີ່ເດີນທາງໄປທົ່ວທຸກຫົນແຫ່ງ ເພິ່ນໄດ້ຂຽນຈົດໝາຍໃຫ້ກັບອ້າຍເອື້ອຍນ້ອງທີ່ຢູ່ໃນຄຣິດຕະຈັກ ຫຼື ໃນເວລາທີ່ເພິ່ນເຈັບປ່ວຍ, ເພິ່ນໄດ້ຂຽນໄປຫາຄຣິດຕະຈັກທີ່ຢູ່ໃນຄວາມຄິດຂອງເພິ່ນເປັນພິເສດ ແຕ່ເພິ່ນບໍ່ສາມາດໄປຫາໄດ້. ດ້ວຍເຫດນັ້ນຈົດໝາຍຂອງເພິ່ນຈຶ່ງຖືກຮັກສາໂດຍຜູ້ຄົນ ແລະ ຮວບຮວມ, ຈຳແນກ, ແລ້ວຈັດວາງພວກມັນຫຼັງຈາກພຣະກິດຕິຄຸນທັງສີ່ຂອງພຣະຄຳພີໃນເວລາຕໍ່ມາ. ແນ່ນອນ ພວກເຂົາຄັດເລືອກ ແລະ ຮວບຮວມຈົດໝາຍທຸກສະບັບທີ່ເພິ່ນຂຽນໄດ້ດີທີ່ສຸດ. ຈົດໝາຍເຫຼົ່ານີ້ເປັນປະໂຫຍດຕໍ່ຊີວິດຂອງອ້າຍເອື້ອຍນ້ອງໃນຄຣິດຕະຈັກ ແລະ ເປັນຈົດໝາຍທີ່ມີຊື່ສຽງໃນເວລານັ້ນເປັນພິເສດ. ເມື່ອໂປໂລຂຽນຈົດໝາຍເຫຼົ່ານີ້ໃນເວລານັ້ນ, ຈຸດປະສົງຂອງເພິ່ນບໍ່ແມ່ນເພື່ອສ້າງຜົນງານທາງຝ່າຍວິນຍານເພື່ອເຮັດໃຫ້ອ້າຍເອື້ອຍນ້ອງສາມາດຄົ້ນພົບເສັ້ນທາງແຫ່ງການປະຕິບັດ ຫຼື ຊີວະປະຫວັດຝ່າຍວິນຍານເພື່ອສະແດງເຖິງປະສົບການຂອງເຂົາເອງ; ເພິ່ນບໍ່ໄດ້ເຈດຕະນາຂຽນປຶ້ມເພື່ອກາຍເປັນນັກປະພັນ. ເພິ່ນພຽງແຕ່ຂຽນຈົດໝາຍໃຫ້ກັບອ້າຍເອື້ອຍນ້ອງທີ່ຢູ່ໃນຄຣິດຕະຈັກຂອງພຣະເຢຊູຄຣິດເຈົ້າ. ໂປໂລສັ່ງສອນອ້າຍເອື້ອຍນ້ອງຈາກຕຳແໜ່ງທີ່ເປັນຄົນຮັບໃຊ້, ເພື່ອບອກພວກເຂົາກ່ຽວກັບພາລະຂອງເພິ່ນ, ຄວາມປະສົງຂອງພຣະເຢຊູເຈົ້າ ແລະ ສິ່ງທີ່ພຣະອົງຝາກຝັງໄວ້ກັບຜູ້ຄົນສຳລັບອະນາຄົດ. ນັ້ນຄືພາລະກິດທີ່ໂປໂລປະຕິບັດ. ຄຳເວົ້າຂອງເພິ່ນອົບຮົມສັ່ງສອນເພື່ອໃຫ້ປະສົບການແກ່ອ້າຍເອື້ອຍນ້ອງໃນອະນາຄົດໄດ້ດີພໍສົມຄວນ. ຄວາມຈິງທີ່ເພິ່ນສື່ສານໄວ້ໃນຈົດໝາຍເຫຼົ່ານີ້ຫຼາຍສະບັບແມ່ນເປັນສິ່ງທີ່ຜູ້ຄົນໃນຍຸກແຫ່ງພຣະຄຸນຄວນປະຕິບັດ ເຊິ່ງດ້ວຍເຫດນັ້ນ ຈົດໝາຍເຫຼົ່ານີ້ຈຶ່ງຖືກຈັດແຈງເຂົ້າໃນພຣະສັນຍາໃໝ່ໃນຮຸ່ນຕໍ່ມາ. ບໍ່ວ່າຜົນໄດ້ຮັບຂອງໂປໂລເປັນແນວໃດໃນທີ່ສຸດ, ເພິ່ນກໍເປັນຄົນທີ່ຖືກໃຊ້ໃນເວລານັ້ນ ຜູ້ທີ່ສະໜັບສະໜູນອ້າຍເອື້ອຍນ້ອງໃນຄຣິດຕະຈັກ. ຜົນໄດ້ຮັບຂອງເພິ່ນແມ່ນຖືກກຳນົດໂດຍທາດແທ້ຂອງເພິ່ນ ພ້ອມທັງການທີ່ເພິ່ນຖືກຕີໃຫ້ລົ້ມລົງໃນເບື້ອງຕົ້ນ. ເພິ່ນສາມາດກ່າວຄຳເວົ້າເຫຼົ່ານັ້ນໃນເວລານັ້ນກໍເພາະເພິ່ນມີພາລະກິດຂອງພຣະວິນຍານບໍລິສຸດ ແລະ ມັນເປັນຍ້ອນພາລະກິດນີ້ ໂປໂລຈຶ່ງໄດ້ແບກພາລະຕໍ່ຄຣິດຕະຈັກ. ດ້ວຍວິທີນີ້ ເພິ່ນຈຶ່ງສາມາດສະໜອງໃຫ້ກັບອ້າຍເອື້ອຍນ້ອງໄດ້. ເຖິງຢ່າງໃດກໍຕາມ ຍ້ອນສະຖານະການພິເສດບາງຢ່າງ, ເພິ່ນຈຶ່ງບໍ່ສາມາດໄປຄຣິດຕະຈັກເພື່ອປະຕິບັດພາລະກິດດ້ວຍຕົນເອງໄດ້, ສະນັ້ນ ເພິ່ນຈຶ່ງຂຽນຈົດໝາຍໃຫ້ກັບພວກເຂົາເພື່ອຕັກເຕືອນອ້າຍເອື້ອຍນ້ອງທີ່ຢູ່ໃນພຣະຜູ້ເປັນເຈົ້າ. ໃນຕອນທຳອິດ ໂປໂລຂົ່ມເຫັງສາວົກຂອງພຣະເຢຊູເຈົ້າ, ແຕ່ຫຼັງຈາກທີ່ພຣະເຢຊູສະເດັດຂຶ້ນສູ່ສະຫວັນ ນັ້ນກໍຄື ຫຼັງຈາກທີ່ເພິ່ນ “ເຫັນແສງສະຫວ່າງ”, ເພິ່ນກໍເຊົາຂົ່ມເຫັງສາວົກຂອງພຣະເຢຊູເຈົ້າ ແລະ ບໍ່ຂົ່ມເຫັງໄພ່ພົນເຫຼົ່ານັ້ນທີ່ເທດສະໜາຂ່າວປະເສີດເພື່ອຫົນທາງຂອງພຣະຜູ້ເປັນເຈົ້າອີກຕໍ່ໄປ. ຫຼັງຈາກທີ່ໂປໂລໄດ້ເຫັນພຣະເຢຊູປາກົດຕໍ່ເພິ່ນດັ່ງແສງໄຟສະຫວ່າງແຈ້ງ, ໂປໂລຈຶ່ງຮັບເອົາການຝາກຝັງຂອງພຣະຜູ້ເປັນເຈົ້າ ແລະ ກາຍເປັນຄົນທີ່ຖືກພຣະວິນຍານບໍລິສຸດໃຊ້ເພື່ອເຜີຍແຜ່ຂ່າວປະເສີດ.

ພາລະກິດຂອງໂປໂລໃນເວລານັ້ນແມ່ນພຽງແຕ່ສິ່ງເສີມ ແລະ ສະໜອງໃຫ້ອ້າຍເອື້ອຍນ້ອງ

ເທົ່ານັ້ນ. ເພິ່ນບໍ່ຄືກັບບາງຄົນທີ່ຕ້ອງການສ້າງວິຊາຊີບ ຫຼື ສ້າງຜົນງານທາງວັນນະຄະດີ, ເປີດເສັ້ນທາງອອກໃໝ່ ຫຼື ເພື່ອຄົ້ນຫາເສັ້ນທາງອື່ນທີ່ຢູ່ນອກພຣະຄຳພີ ເພື່ອນຳພາຜູ້ຄົນໃນຄຣິດຕະຈັກ ເພື່ອວ່າພວກເຂົາທຸກຄົນຈະສາມາດຮັບເອົາທາງເຂົ້າໃໝ່. ໂປໂລເປັນຄົນທີ່ຖືກໃຊ້; ໃນການເຮັດສິ່ງທີ່ເພິ່ນເຮັດ, ເພິ່ນພຽງແຕ່ປະຕິບັດຕາມໜ້າທີ່ຂອງເພິ່ນ. ຖ້າເພິ່ນບໍ່ແບກພາລະຕໍ່ຄຣິດຕະຈັກ, ແລ້ວເພິ່ນກໍຈະຖືກພິຈາລະນາວ່າໄດ້ປະລະໜ້າທີ່ຂອງເພິ່ນ. ຖ້າບາງສິ່ງທີ່ສ້າງຄວາມແຕກແຍກເກີດຂຶ້ນ ຫຼື ມີເຫດການກະບົດໃນຄຣິດຕະຈັກເຊິ່ງນຳໄປສູ່ສະພາວະບໍ່ປົກກະຕິຂອງຜູ້ຄົນທີ່ຢູ່ໃນນັ້ນ, ແລ້ວເພິ່ນກໍຈະຖືກພິຈາລະນາວ່າບໍ່ປະຕິບັດພາລະກິດຂອງເພິ່ນຢ່າງຖືກຕ້ອງ. ຖ້າຄົນງານແບກຮັບພາລະຕໍ່ຄຣິດຕະຈັກ ແລະຍັງປະຕິບັດພາລະກິດດ້ວຍສຸດຄວາມສາມາດຂອງເຂົາ, ແລ້ວສິ່ງນີ້ກໍພິສູດໃຫ້ເຫັນວ່າ ບຸກຄົນນີ້ເປັນຄົນງານທີ່ມີຄຸນສົມບັດ, ເປັນຄົນທີ່ມີຄຸນສົມບັດໃນການຖືກໃຊ້. ຖ້າບຸກຄົນໃດໜຶ່ງບໍ່ຮູ້ສຶກເຖິງພາລະຕໍ່ຄຣິດຕະຈັກ ແລະ ບໍ່ບັນລຸຜົນສຳເລັດໃນວຽກງານຂອງພວກເຂົາ ແລະ ຄົນສ່ວນໃຫຍ່ທີ່ພວກເຂົານຳພາແມ່ນອ່ອນແອ ຫຼື ພວກເຂົາເຖິງກັບລົ້ມລົງ, ແລ້ວຄົນງານດັ່ງກ່າວກໍບໍ່ໄດ້ປະຕິບັດໜ້າທີ່ຂອງເຂົາ. ໃນທຳນອງດຽວກັນ ໂປໂລກໍບໍ່ໄດ້ຖືກຍົກເວັ້ນ, ເຊິ່ງນັ້ນຄືເຫດຜົນທີ່ວ່າ ເປັນຫຍັງເພິ່ນຈຶ່ງດູແລຄຣິດຕະຈັກ ຫຼື ຂຽນຈົດໝາຍໄປຫາອ້າຍເອື້ອຍນ້ອງຢູ່ເລື້ອຍໆ. ມັນແມ່ນດ້ວຍວິທີນີ້ທີ່ເພິ່ນຈຶ່ງສາມາດສະໜອງໃຫ້ກັບຄຣິດຕະຈັກໄດ້ ແລະ ດູແລອ້າຍເອື້ອຍນ້ອງຂອງເພິ່ນ; ມັນເປັນວິທີນີ້ເທົ່ານັ້ນທີ່ຄຣິດຕະຈັກຈະສາມາດຮັບເອົາການສະໜອງ ແລະ ການດູແລຈາກເພິ່ນໄດ້. ຄຳເວົ້າໃນຈົດໝາຍທີ່ເພິ່ນຂຽນແມ່ນເລິກເຊິ່ງຫຼາຍ, ແຕ່ຈົດໝາຍຂອງເພິ່ນແມ່ນຖືກຂຽນໃຫ້ກັບອ້າຍເອື້ອຍນ້ອງພາຍໃຕ້ສະພາບການໄດ້ຮັບແສງສະຫວ່າງຂອງພຣະວິນຍານບໍລິສຸດ ແລະ ເພິ່ນຂຽນປະສົບການ ແລະພາລະສ່ວນຕົວທີ່ເພິ່ນໄດ້ຮັບເຂົ້າໃນການຂຽນຂອງເພິ່ນ. ໂປໂລເປັນພຽງແຕ່ຄົນທີ່ຖືກພຣະວິນຍານບໍລິສຸດໃຊ້ ແລະ ເນື້ອຫາໃນຈົດໝາຍຂອງເພິ່ນກໍລ້ວນແລ້ວແຕ່ຕິແຜ່ປະສົບການສ່ວນຕົວຂອງເພິ່ນ. ພາລະກິດທີ່ເພິ່ນປະຕິບັດພຽງແຕ່ເປັນຕົວແທນໃຫ້ກັບພາລະກິດຂອງອັກຄະສາວົກເທົ່ານັ້ນ, ບໍ່ແມ່ນພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໂດຍກົງ ແລະ ມັນຍັງແຕກຕ່າງຈາກພາລະກິດຂອງພຣະຄຣິດອີກດ້ວຍ. ໂປໂລພຽງແຕ່ປະຕິບັດໜ້າທີ່ຂອງເພິ່ນ ເຊິ່ງດ້ວຍເຫດນັ້ນ ໂປໂລຈຶ່ງສະໜອງພາລະຂອງເພິ່ນ ພ້ອມທັງປະສົບການ ແລະ ຄວາມເຂົ້າໃຈສ່ວນຕົວຂອງເພິ່ນໃຫ້ກັບອ້າຍເອື້ອຍນ້ອງທີ່ຢູ່ໃນພຣະຜູ້ເປັນເຈົ້າ. ໂປໂລພຽງແຕ່ປະຕິບັດພາລະກິດທີ່ພຣະເຈົ້າຝາກຝັງໃຫ້ ໂດຍສະໜອງຄວາມຮູ້ ແລະ ຄວາມເຂົ້າໃຈສ່ວນຕົວຂອງເພິ່ນ; ແນ່ນອນ ນີ້ບໍ່ແມ່ນລັກສະນະຂອງພາລະກິດທີ່ພຣະເຈົ້າເອງກຳລັງປະຕິບັດພາລະກິດໂດຍກົງ. ດ້ວຍເຫດນັ້ນ ພາລະກິດຂອງໂປໂລຈຶ່ງປະສົມກັບປະສົບການຂອງມະນຸດ ແລະມຸມມອງຂອງມະນຸດ ແລະ ການເຂົ້າໃຈພາລະກິດຂອງຄຣິດຕະຈັກ. ເຖິງຢ່າງໃດກໍຕາມ ມຸມມອງ ແລະຄວາມຮູ້ເຫຼົ່ານີ້ຂອງມະນຸດແມ່ນບໍ່ສາມາດເວົ້າໄດ້ວ່າ ເປັນພາລະກິດຂອງວິນຍານຊົ່ວຮ້າຍ ຫຼື ພາລະກິດແຫ່ງເນື້ອໜັງ ແລະ ເລືອດ; ພຽງສາມາດເວົ້າໄດ້ວ່າພວກມັນເປັນຄວາມຮູ້ ແລະ ປະສົບການຂອງຄົນທີ່ໄດ້ຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດ. ໂດຍສິ່ງນີ້, ເຮົາໝາຍຄວາມວ່າ ຈົດໝາຍຂອງໂປໂລບໍ່ແມ່ນໜັງສືຈາກສະຫວັນ. ພວກມັນບໍ່ໄດ້ສັກສິດ ແລະ ບໍ່ໄດ້ຖືກກ່າວອອກມາ ຫຼື ສຳແດງອອກມາ

ໂດຍພຣະວິນຍານບໍລິສຸດເລີຍ; ພວກມັນເປັນພຽງການສະແດງອອກມາຈາກພາລະຂອງໂປໂລຕໍ່ຄຣິດຕະຈັກ. ເປົ້າໝາຍຂອງການທີ່ເຮົາເວົ້າສິ່ງນີ້ທັງໝົດກໍເພື່ອໃຫ້ພວກເຈົ້າເຂົ້າໃຈຄວາມແຕກຕ່າງລະຫວ່າງພາລະກິດຂອງພຣະເຈົ້າ ແລະ ວຽກງານຂອງມະນຸດ. ພາລະກິດຂອງພຣະເຈົ້າເປັນຕົວແທນໃຫ້ກັບພຣະເຈົ້າເອງ, ໃນຂະນະທີ່ພາລະກິດຂອງມະນຸດກໍເປັນຕົວແທນໃຫ້ກັບໜ້າທີ່ ແລະ ປະສົບການຂອງມະນຸດ. ຄົນໜຶ່ງບໍ່ຄວນເບິ່ງວ່າ ພາລະກິດທຳມະດາຂອງພຣະເຈົ້າແມ່ນຄວາມປະສົງຂອງມະນຸດ ແລະ ພາລະກິດທີ່ຢູ່ເໜືອທຳມະຊາດຂອງພຣະອົງແມ່ນຄວາມປະສົງຂອງພຣະເຈົ້າ; ຍິ່ງໄປກວ່ານັ້ນຄົນໜຶ່ງບໍ່ຄວນເບິ່ງການເທດສະໜາທີ່ສູງສົ່ງຂອງມະນຸດເປັນຖ້ອຍຄຳຂອງພຣະເຈົ້າ ຫຼື ໜັງສືຈາກສະຫວັນ. ມຸມມອງນີ້ລ້ວນແລ້ວແຕ່ຂັດກັບຈັນຍາບັນ. ເມື່ອໄດ້ຍິນເຮົາວິເຄາະຈົດໝາຍສິບສາມສະບັບຂອງໂປໂລ, ຫຼາຍຄົນກໍຄິດວ່າຈົດໝາຍຂອງໂປໂລຕ້ອງບໍ່ຖືກອ່ານ ແລະ ໂປໂລເປັນມະນຸດທີ່ມີຄວາມບາບຢ່າງໃຫຍ່ຫຼວງ. ມີຫຼາຍຄົນທີ່ເຖິງກັບຄິດວ່າພຣະທຳຂອງເຮົາໄຮ້ຄວາມຮູ້ສຶກ, ການທີ່ເຮົາປະເມີນຈົດໝາຍຂອງໂປໂລແມ່ນບໍ່ຖືກຕ້ອງ ແລະ ຈົດໝາຍຂອງເພິ່ນບໍ່ສາມາດຖືວ່າເປັນການສະແດງອອກເຖິງປະສົບການ ແລະ ພາລະຂອງມະນຸດ. ພວກເຂົາເຊື່ອວ່າຈົດໝາຍເຫຼົ່ານີ້ຄວນຖືວ່າເປັນພຣະທຳຂອງພຣະເຈົ້າ, ພວກມັນສຳຄັນສຳລັບໜັງສືພຣະນິມິດຂອງໂຢຮັນ ເຊິ່ງບໍ່ສາມາດຖືກຕັດພວກມັນອອກໄດ້ ຫຼື ເພີ່ມເຕີມໄດ້ ແລະ ຍິ່ງໄປກວ່ານັ້ນ ບໍ່ສາມາດອະທິບາຍຈົດໝາຍນັ້ນຕາມອຳເພີໃຈ. ການຢືນຢັນທັງໝົດຂອງມະນຸດບໍ່ແມ່ນສິ່ງທີ່ຜິດບໍ? ທັງໝົດນີ້ ມັນບໍ່ແມ່ນເປັນຍ້ອນຜູ້ຄົນບໍ່ມີຄວາມຮູ້ສຶກບໍ? ຈົດໝາຍຂອງໂປໂລເປັນປະໂຫຍດໃຫ້ກັບຜູ້ຄົນຫຼາຍ ແລະ ພວກມັນກໍມີປະຫວັດສາດຫຼາຍກວ່າ 2.000 ປີ. ເຖິງຢ່າງໃດກໍຕາມ ຈົນເຖິງປັດຈຸບັນ, ຍັງມີຫຼາຍຄົນທີ່ບໍ່ສາມາດເຂົ້າໃຈໃນສິ່ງທີ່ເພິ່ນກ່າວໃນເວລານັ້ນ. ຜູ້ຄົນຮັບຮູ້ວ່າຈົດໝາຍຂອງໂປໂລຄືຜົນງານເອກທີ່ຍິ່ງໃຫຍ່ທີ່ສຸດທົ່ວທັງສາສະໜາຄຣິດ ແລະ ບໍ່ມີໃຜສາມາດຖອດເນື້ອຫາຂອງມັນອອກໄດ້ ແລະ ບໍ່ມີໃຜສາມາດເຂົ້າໃຈມັນໄດ້ຢ່າງສົມບູນ. ຕາມຄວາມຈິງແລ້ວ ຈົດໝາຍເຫຼົ່ານີ້ເປັນຄືກັບຊີວະປະຫວັດຂອງບຸກຄົນຝ່າຍວິນຍານ ແລະ ບໍ່ສາມາດປຽບທຽບໄດ້ກັບພຣະທຳຂອງພຣະເຢຊູ ຫຼື ນິມິດທີ່ຍິ່ງໃຫຍ່ທີ່ໂຢຮັນໄດ້ເຫັນ. ກົງກັນຂ້າມ ນິມິດທີ່ໂຢຮັນໄດ້ເຫັນກໍເປັນນິມິດທີ່ຍິ່ງໃຫຍ່ຈາກສະຫວັນ ນັ້ນກໍຄື ຄຳທຳນາຍຂອງພາລະກິດຂອງພຣະເຈົ້າເອງ ເຊິ່ງມະນຸດບໍ່ສາມາດບັນລຸໄດ້ ໃນຂະນະທີ່ຈົດໝາຍຂອງໂປໂລເປັນພຽງແຕ່ການອະທິບາຍເຖິງສິ່ງທີ່ມະນຸດເຫັນ ແລະ ຜະເຊີນ. ພວກມັນແມ່ນສິ່ງທີ່ມະນຸດສາມາດເຮັດໄດ້ ແລະ ບໍ່ແມ່ນຄຳທຳນາຍ ຫຼື ນິມິດ; ພວກມັນເປັນພຽງຈົດໝາຍທີ່ສົ່ງໄປສະຖານທີ່ຕ່າງໆ. ເຖິງຢ່າງໃດກໍຕາມ, ສຳລັບຄົນໃນເວລານັ້ນ, ໂປໂລເປັນຄົນງານ ແລະ ສະນັ້ນ ຄຳເວົ້າຂອງເພິ່ນຈຶ່ງມີຄ່າ, ຍ້ອນເພິ່ນເປັນຄົນທີ່ຮັບເອົາສິ່ງທີ່ຝາກຝັງໄວ້ໃຫ້ກັບເພິ່ນ. ສະນັ້ນ ຈົດໝາຍຂອງເພິ່ນຈຶ່ງເປັນປະໂຫຍດຕໍ່ທຸກຄົນທີ່ສະແຫວງຫາພຣະຄຣິດ. ເຖິງແມ່ນຄຳເວົ້າເຫຼົ່ານັ້ນບໍ່ໄດ້ຖືກກ່າວໂດຍພຣະເຢຊູເປັນການສ່ວນຕົວກໍຕາມ, ໃນທີ່ສຸດແລ້ວ ຈົນໝາຍນັ້ນກໍສຳຄັນສຳລັບເວລາຂອງມັນ. ສະນັ້ນ ຄົນທີ່ມານຳຫຼັງໂປໂລກໍຈັດແຈງຈົດໝາຍເຫຼົ່ານີ້ເພື່ອສົ່ງຕໍ່ຈົນເຖິງປັດຈຸບັນ. ພວກເຈົ້າເຂົ້າໃຈຄວາມໝາຍຂອງເຮົາບໍ? ເຮົາພຽງແຕ່ອະທິບາຍຈົດໝາຍເຫຼົ່ານີ້ອີງຕາມຄວາມເປັນຈິງ ແລະ ວິເຄາະມັນໂດຍບໍ່ໄດ້ປະຕິເສດປະໂຫຍດ ແລະ ຄຸນຄ່າຂອງ

ພວກມັນໃນການເປັນບ່ອນອ້າງອີງ. ຖ້າຫຼັງຈາກທີ່ໄດ້ອ່ານພຣະທຳຂອງເຮົາແລ້ວ ພວກເຈົ້າບໍ່ພຽງແຕ່ປະຕິເສດຈົດໝາຍຂອງໂປໂລ ແຕ່ກຳນົດວ່າມັນເປັນຄວາມເຊື່ອທີ່ຜິດ ຫຼື ບໍ່ມີຄຸນຄ່າ, ນັ້ນກໍສາມາດເວົ້າໄດ້ວ່າຄວາມສາມາດໃນການຮັບຂອງພວກເຈົ້ານັ້ນມີຕໍ່າຫຼາຍ, ເຊັ່ນດຽວກັບຄວາມເຂົ້າໃຈຂອງພວກເຈົ້າ ແລະ ການທີ່ເຈົ້າຕັດສິນສິ່ງຕ່າງໆ; ມັນບໍ່ສາມາດເວົ້າໄດ້ຢ່າງແນ່ນອນວ່າ ພຣະທຳຂອງເຮົາລຳອຽງເກີນໄປ. ພວກເຈົ້າເຂົ້າໃຈແລ້ວບໍໃນຕອນນີ້? ສິ່ງສຳຄັນທີ່ຈະໃຫ້ພວກເຈົ້າເຂົ້າໃຈແມ່ນສະຖານະການຕົວຈິງແຫ່ງພາລະກິດຂອງໂປໂລໃນເວລານັ້ນ ແລະ ເບື້ອງຫຼັງໃນຈົດໝາຍຂອງເພິ່ນທີ່ຖືກຂຽນຂຶ້ນ. ຖ້າພວກເຈົ້າມີມຸມມອງທີ່ຖືກຕ້ອງກ່ຽວກັບສະຖານະການເຫຼົ່ານີ້, ແລ້ວພວກເຈົ້າກໍຈະມີມຸມມອງທີ່ຖືກຕ້ອງກ່ຽວກັບຈົດໝາຍຂອງໂປໂລເຊັ່ນກັນ. ໃນເວລາດຽວກັນ ຫຼັງຈາກທີ່ເຈົ້າເຂົ້າໃຈແກ່ນແທ້ຂອງຈົດໝາຍເຫຼົ່ານັ້ນ, ການປະເມີນພຣະຄຳພີຂອງເຈົ້າກໍຈະຖືກຕ້ອງ ແລະ ແລ້ວເຈົ້າກໍ່ຈະເຂົ້າໃຈວ່າເປັນຫຍັງຈົດໝາຍຂອງໂປໂລຈຶ່ງຖືກນະມັດສະການຫຼາຍໂດຍຄົນທີ່ມາພາຍຫຼັງເປັນເວລາຫຼາຍປີ ພ້ອມທັງເປັນຫຍັງຈຶ່ງມີຫຼາຍຄົນເຖິງກັບປະຕິບັດຕໍ່ເພິ່ນຄືກັບພຣະເຈົ້າ. ນັ້ນບໍ່ແມ່ນສິ່ງທີ່ພວກເຈົ້າຈະຄິດຄືກັນບໍ ຖ້າພວກເຈົ້າບໍ່ໄດ້ເຂົ້າໃຈມັນ?

ຜູ້ທີ່ບໍ່ແມ່ນພຣະເຈົ້າກໍຈະບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າເອງໄດ້. ພາລະກິດຂອງໂປໂລພຽງແຕ່ສາມາດເວົ້າໄດ້ວ່າເປັນສ່ວນໜຶ່ງຂອງມຸມມອງຂອງມະນຸດ ແລະ ເປັນສ່ວນໜຶ່ງຂອງການສ່ອງແສງສະຫວ່າງຈາກພຣະວິນຍານບໍລິສຸດ. ໂປໂລຂຽນຄຳເວົ້າເຫຼົ່ານີ້ຈາກມຸມມອງຂອງມະນຸດ, ຈາກແສງສະຫວ່າງຂອງພຣະວິນຍານບໍລິສຸດ. ນີ້ບໍ່ແມ່ນເລື່ອງແປກ. ສະນັ້ນ ມັນຈຶ່ງຫຼີກເວັ້ນບໍ່ໄດ້ ທີ່ຄຳເວົ້າຂອງເພິ່ນຈະປະສົມກັບປະສົບການບາງຢ່າງຂອງມະນຸດ ແລະ ຕໍ່ມາ ເພິ່ນກໍໃຊ້ປະສົບການສ່ວນຕົວຂອງເພິ່ນເພື່ອສະໜອງ ແລະ ສົ່ງເສີມອ້າຍເອື້ອຍນ້ອງໃນເວລານັ້ນ. ຈົດໝາຍທີ່ເພິ່ນຂຽນບໍ່ສາມາດຈັດເປັນປະເພດການສຶກສາກ່ຽວກັບຊີວິດ ຫຼື ມັນກໍບໍ່ຖືກຈັດປະເພດເປັນຊີວະປະຫວັດ ຫຼື ຂໍ້ຄວາມ. ຍິ່ງໄປກວ່ານັ້ນ ສິ່ງເຫຼົ່ານີ້ບໍ່ແມ່ນຄວາມຈິງທີ່ຄຣິດຕະຈັກຕ້ອງປະຕິບັດຕາມ ຫຼື ບໍ່ແມ່ນບົດບັນຍັດການບໍລິຫານຂອງຄຣິດຕະຈັກ. ໃນຖານະທີ່ເປັນຄົນທີ່ມີພາລະ ນັ້ນກໍຄື ເປັນຄົນທີ່ຖືກມອບໝາຍພາລະກິດໂດຍພຣະວິນຍານບໍລິສຸດ, ນີ້ແມ່ນສິ່ງທີ່ພວກເຂົາພຽງແຕ່ຕ້ອງໄດ້ເຮັດ. ຖ້າພຣະວິນຍານບໍລິສຸດຍົກຜູ້ຄົນຂຶ້ນ ແລະ ມອບພາລະໃຫ້ພວກເຂົາ ແຕ່ພວກເຂົາບໍ່ຮັບເອົາພາລະກິດຂອງຄຣິດຕະຈັກ ແລະ ຄຸ້ມຄອງວຽກງານຕ່າງໆຂອງຄຣິດຕະຈັກເປັນຢ່າງດີ ຫຼື ແກ້ທຸກບັນຫາຂອງຄຣິດຕະຈັກຢ່າງເປັນທີ່ພໍໃຈ, ແລ້ວສິ່ງນີ້ກໍຈະພິສູດໃຫ້ເຫັນວ່າ ຜູ້ຄົນເຫຼົ່ານັ້ນບໍ່ໄດ້ປະຕິບັດຕາມໜ້າທີ່ຂອງພວກເຂົາຢ່າງຖືກຕ້ອງ. ສະນັ້ນ ມັນຈຶ່ງບໍ່ແມ່ນສິ່ງເລິກລັບຫຍັງທີ່ອັກຄະສາວົກຈະສາມາດຂຽນຈົດໝາຍໃນຊ່ວງໄລຍະຂອງພາລະກິດຂອງພວກເຂົາ. ນີ້ແມ່ນສ່ວນໜຶ່ງຂອງວຽກງານຂອງພວກເຂົາ; ພວກເຂົາກໍມີພັນທະຕ້ອງປະຕິບັດຕາມ. ຈຸດປະສົງໃນການຂຽນຈົດໝາຍເຫຼົ່ານີ້ບໍ່ແມ່ນເພື່ອຂຽນການສຶກສາກ່ຽວກັບຊີວິດ ຫຼື ຊີວະປະຫວັດຝ່າຍວິນຍານ ແລະ ມັນບໍ່ແມ່ນການເປີດຫົນທາງອອກໃຫ້ກັບໄພ່ພົນຢ່າງແນ່ນອນທີ່ສຸດ. ກົງກັນຂ້າມ, ພວກເຂົາເຮັດມັນເພື່ອປະຕິບັດໜ້າທີ່ຂອງພວກເຂົາເອງ ແລະ ເປັນຄົນຮັບໃຊ້ທີ່ຈົງຮັກພັກດີຕໍ່ພຣະເຈົ້າ, ເພື່ອວ່າພວກເຂົາຈະສາມາດລາຍງານຕໍ່ພຣະເຈົ້າໂດຍເຮັດໃຫ້ໜ້າທີ່

ທີ່ພຣະເຈົ້າຝາກຝັງໃຫ້ກັບພວກເຂົານັ້ນສຳເລັດລົງ. ພວກເຂົາຕ້ອງຮັບຜິດຊອບໃຫ້ກັບຕົນເອງ ແລະ ອ້າຍເອື້ອຍນ້ອງຂອງພວກເຂົາທີ່ຢູ່ໃນພາລະກິດຂອງພວກເຂົາ ແລະ ພວກເຂົາຕ້ອງເຮັດວຽກຂອງພວກເຂົາໃຫ້ດີ ແລະ ໃສ່ໃຈໃນວຽກງານຂອງຄຣິດຕະຈັກ. ທັງໝົດນີ້ເປັນພຽງສ່ວນໜຶ່ງຂອງວຽກຂອງພວກເຂົາ.

ຖ້າພວກເຈົ້າມີຄວາມເຂົ້າໃຈກ່ຽວກັບຈົດໝາຍຂອງໂປໂລ, ພວກເຈົ້າກໍຈະມີຄວາມເຂົ້າໃຈ ແລະ ການປະເມີນຜົນຢ່າງຖືກຕ້ອງກ່ຽວກັບຈົດໝາຍຂອງເປໂຕ ແລະ ໂຢຮັນ. ພວກເຈົ້າຈະບໍ່ຫຼຽວເບິ່ງວ່າຈົດໝາຍເຫຼົ່ານີ້ເປັນໜັງສືຈາກສະຫວັນທີ່ສັກສິດ ແລະ ບໍ່ສາມາດລະເມີດໄດ້ອີກຕໍ່ໄປ, ແຮງໄກທີ່ພວກເຈົ້າຈະເຫັນວ່າໂປໂລເປັນພຣະເຈົ້າ. ໃນທີ່ສຸດແລ້ວ, ພາລະກິດຂອງພຣະເຈົ້າກໍແຕກຕ່າງຈາກພາລະກິດຂອງມະນຸດ ແລະ ຍິ່ງໄປກວ່ານັ້ນ ການສະແດງອອກຂອງພຣະເຈົ້າຈະຄືກັບຂອງມະນຸດໄດ້ແນວໃດ? ພຣະເຈົ້າກໍມີອຸປະນິໄສສະເພາະຂອງພຣະເຈົ້າເອງ, ໃນຂະນະທີ່ມະນຸດກໍມີໜ້າທີ່ໆມະນຸດຄວນປະຕິບັດ. ອຸປະນິໄສຂອງພຣະເຈົ້າແມ່ນຖືກສະແດງອອກໃນພາລະກິດຂອງພຣະອົງ, ໃນຂະນະທີ່ໜ້າທີ່ຂອງມະນຸດກໍປະກອບຢູ່ໃນປະສົບການຂອງມະນຸດ ແລະ ຖືກສະແດງອອກໃນການສະແຫວງຫາຂອງມະນຸດ. ສະນັ້ນ ມັນຈຶ່ງເຫັນໄດ້ຊັດເຈນຜ່ານພາລະກິດທີ່ຖືກດຳເນີນ ບໍ່ວ່າຈະເປັນການສະແດງອອກຂອງພຣະເຈົ້າ ຫຼື ຂອງມະນຸດ. ມັນບໍ່ຈຳເປັນຕ້ອງໄດ້ຮັບການອະທິບາຍໂດຍພຣະເຈົ້າເອງ ຫຼື ມັນບໍ່ໄດ້ຮຽກຮ້ອງໃຫ້ມະນຸດພະຍາຍາມເປັນພະຍານ; ຍິ່ງໄປກວ່ານັ້ນ ມັນບໍ່ໄດ້ຕ້ອງການໃຫ້ພຣະເຈົ້າເອງຢັບຢັ້ງຄົນໃດໜຶ່ງ. ທຸກສິ່ງນີ້ເກີດຂຶ້ນດັ່ງການເປີດເຜີຍໂດຍທຳມະຊາດ; ມັນບໍ່ແມ່ນການບັງຄັບ ຫຼື ສິ່ງທີ່ມະນຸດສາມາດແຊກແຊງໄດ້. ໜ້າທີ່ຂອງມະນຸດແມ່ນສາມາດຮູ້ຈັກໄດ້ຜ່ານປະສົບການຂອງເຂົາ ແລະ ມັນບໍ່ໄດ້ຮຽກຮ້ອງໃຫ້ຜູ້ຄົນປະຕິບັດພາລະກິດເພີ່ມເຕີມຈາກປະສົບການ. ແກ່ນແທ້ທຸກຢ່າງຂອງມະນຸດສາມາດຖືກເປີດເຜີຍອອກເມື່ອເຂົາປະຕິບັດໜ້າທີ່ຂອງເຂົາ, ໃນຂະນະທີ່ພຣະເຈົ້າສາມາດສະແດງອອກເຖິງອຸປະນິໄສໂດຍທຳມະຊາດຂອງພຣະອົງໃນຂະນະທີ່ພຣະອົງປະຕິບັດພາລະກິດຂອງພຣະອົງ. ຖ້າມັນເປັນພາລະກິດຂອງມະນຸດ ແລ້ວມັນກໍບໍ່ສາມາດຖືກປົກປິດໄດ້. ຖ້າມັນເປັນພາລະກິດຂອງພຣະເຈົ້າ ແລ້ວອຸປະນິໄສຂອງພຣະເຈົ້າຍິ່ງເປັນໄປບໍ່ໄດ້ທີ່ຈະຖືກປົກປິດໂດຍຄົນໃດຄົນໜຶ່ງ, ແຮງໄກທີ່ຈະສາມາດຖືກຄວບຄຸມໂດຍມະນຸດ. ບໍ່ສາມາດເວົ້າໄດ້ວ່າມະນຸດເປັນພຣະເຈົ້າ ຫຼື ພາລະກິດ ແລະ ຄຳເວົ້າຂອງເຂົາແມ່ນບໍ່ສາມາດເບິ່ງໄດ້ວ່າເປັນສິ່ງບໍລິສຸດ ຫຼື ຖືວ່າບໍ່ສາມາດປ່ຽນແປງໄດ້. ບໍ່ສາມາດເວົ້າໄດ້ວ່າພຣະເຈົ້າເປັນມະນຸດ ຍ້ອນພຣະອົງສວມຕົນເອງດ້ວຍເນື້ອໜັງ ແຕ່ພາລະກິດຂອງພຣະອົງກໍບໍ່ສາມາດຖືວ່າເປັນພາລະກິດຂອງມະນຸດ ຫຼື ໜ້າທີ່ຂອງມະນຸດໄດ້. ຍິ່ງໄປກວ່ານັ້ນ ຖ້ອຍຄຳຂອງພຣະເຈົ້າ ແລະ ຈົດໝາຍຂອງໂປໂລກໍບໍ່ສາມາດເຮັດໃຫ້ເທົ່າທຽມກັນໄດ້ ຫຼື ການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າ ແລະ ຄຳສັ່ງສອນຂອງມະນຸດກໍບໍ່ສາມາດເວົ້າໄດ້ວ່າເທົ່າທຽມກັນໄດ້. ສະນັ້ນ ຈຶ່ງມີຫຼັກການທີ່ແຍກແຍະພາລະກິດຂອງພຣະເຈົ້າອອກຈາກພາລະກິດຂອງມະນຸດ. ສິ່ງນີ້ຖືກຈຳແນກໂດຍອີງຕາມທາດແທ້ຂອງມັນ, ບໍ່ແມ່ນຂອບເຂດຂອງພາລະກິດ ຫຼື ປະສິດທິພາບຊົ່ວຄາວຂອງພາລະກິດນັ້ນໆ. ໃນຫົວຂໍ້ນີ້ ຄົນສ່ວນໃຫຍ່ແມ່ນຜິດພາດກ່ຽວກັບຫຼັກການ. ນີ້ກໍເພາະວ່າ ມະນຸດເບິ່ງ

ແຕ່ພາຍນອກ ເຊິ່ງພວກເຂົາສາມາດບັນລຸໄດ້, ໃນຂະນະທີ່ພຣະເຈົ້າເບິ່ງທີ່ທາດແທ້ ເຊິ່ງບໍ່ສາມາດສັງເກດເຫັນດ້ວຍສາຍຕາທາງເນື້ອໜັງຂອງມະນຸດຊາດໄດ້. ຖ້າເຈົ້າຖືວ່າພຣະທຳ ແລະ ພາລະກິດຂອງພຣະເຈົ້າເປັນໜ້າທີ່ຂອງມະນຸດປົກກະຕິ ແລະ ເບິ່ງພາລະກິດຂະໜາດໃຫຍ່ຂອງມະນຸດເປັນພາລະກິດຂອງພຣະເຈົ້າທີ່ຖືກປົກຄຸມໃນເນື້ອໜັງ ເຊິ່ງກົງກັນຂ້າມກັບໜ້າທີ່ຆງມະນຸດປະຕິບັດ, ແລ້ວເຈົ້າບໍ່ໄດ້ເຂົ້າໃຈຫຼັກການຜິດບໍ? ຈົດໝາຍ ແລະ ຊີວະປະຫວັດຂອງມະນຸດແມ່ນສາມາດຖືກສ້າງຂຶ້ນໄດ້ຢ່າງງ່າຍດາຍ, ແຕ່ມັນຢູ່ບົນພື້ນຖານຂອງພາລະກິດຂອງພຣະວິນຍານບໍລິສຸດເທົ່ານັ້ນ. ເຖິງຢ່າງໃດກໍຕາມ, ມະນຸດບໍ່ສາມາດເຮັດໃຫ້ຖ້ອຍຄຳ ແລະ ພາລະກິດຂອງພຣະເຈົ້າສຳເລັດໄດ້ຢ່າງງ່າຍດາຍ ຫຼື ບັນລຸໄດ້ໂດຍສະຕິປັນຍາ ແລະ ຄວາມຄິດຂອງມະນຸດ ຫຼື ຜູ້ຄົນບໍ່ສາມາດອະທິບາຍໄດ້ຢ່າງລະອຽດຫຼັງຈາກທີ່ໄດ້ຄົ້ນຄວ້າພວກເຂົາ. ຖ້າເລື່ອງຫຼັກການເຫຼົ່ານີ້ບໍ່ມີປະຕິກິລິຍາໃນຕົວພວກເຈົ້າ, ແລ້ວຄວາມເຊື່ອຂອງພວກເຈົ້າກໍບໍ່ເປັນຈິງ ແລະ ບໍ່ໄດ້ຖືກຫຼໍ່ຫຼອມຢ່າງຊັດເຈນ. ມັນພຽງແຕ່ສາມາດເວົ້າໄດ້ວ່າຄວາມເຊື່ອຂອງພວກເຈົ້າແມ່ນເຕັມໄປດ້ວຍຄວາມບໍ່ແຈ່ມແຈ້ງ ແລະ ທັງສັບສົນ ແລະ ຂາດຫຼັກການອີກດ້ວຍ. ຫາກບໍ່ມີແມ່ນແຕ່ການເຂົ້າໃຈບັນຫາພື້ນຖານທີ່ສຳຄັນທີ່ສຸດຂອງພຣະເຈົ້າ ແລະ ມະນຸດ, ຄວາມເຊື່ອປະເພດນີ້ຈະບໍ່ແມ່ນຄວາມເຊື່ອແບບຂາດຄວາມສຳນຶກບໍ? ໂປໂລຈະເປັນຄົນດຽວທີ່ຖືກໃຊ້ຕະຫຼອດປະຫວັດສາດທັງໝົດໄດ້ແນວໃດ? ໂປໂລຈະເປັນຄົນດຽວທີ່ປະຕິບັດພາລະກິດເພື່ອຄຣິດຕະຈັກໄດ້ແນວໃດ? ເພິ່ນຈະສາມາດເປັນຄົນດຽວທີ່ຂຽນໄປຫາຄຣິດຕະຈັກເພື່ອສິ່ງເສີມພວກເຂົາໄດ້ແນວໃດ? ບໍ່ວ່າຈະເປັນຂະໜາດ ຫຼື ອິດທິພົນຂອງພາລະກິດຂອງຄົນເຫຼົ່ານີ້ ຫຼື ແມ່ນແຕ່ຜົນຕາມມາຂອງພາລະກິດຂອງພວກເຂົາ, ຫຼັກການ ແລະ ແກ່ນແທ້ຂອງພາລະກິດດັ່ງກ່າວກໍຈະບໍ່ຄືກັນທັງໝົດບໍ? ບໍ່ມີສິ່ງໃດໜຶ່ງກ່ຽວກັບພາລະກິດນັ້ນທີ່ແຕກຕ່າງກັນຈາກພາລະກິດຂອງພຣະເຈົ້າບໍ? ເຖິງແມ່ນຈະມີຄວາມແຕກຕ່າງຢ່າງຊັດເຈນລະຫວ່າງແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ແລະ ເຖິງແມ່ນວ່າວິທີການຫຼາຍຢ່າງຂອງພາລະກິດແມ່ນບໍ່ຄືກັນທັງໝົດ, ພວກມັນທັງໝົດບໍ່ໄດ້ມີພຽງທາດແທ້ ແລະ ແຫຼ່ງກຳເນີດອັນດຽວກັນບໍ? ສະນັ້ນ ຖ້າຄົນໜຶ່ງຍັງບໍ່ຊັດເຈນກ່ຽວກັບສິ່ງຕ່າງໆເຫຼົ່ານີ້ໃນຕອນນີ້, ແລ້ວພວກເຂົາກໍຂາດເຂີນຫຼາຍໃນເຫດຜົນ. ຫຼັງຈາກທີ່ອ່ານຄຳເວົ້າເຫຼົ່ານີ້ແລ້ວ ຖ້າຄົນໜຶ່ງຍັງເວົ້າວ່າຈົດໝາຍຂອງໂປໂລສັກສິດ ແລະ ບໍ່ສາມາດລະເມີດໄດ້ ແລະ ແຕກຕ່າງຈາກຊີວະປະຫວັດຂອງຕົວລະຄອນຝ່າຍວິນຍານອື່ນໆ, ແລ້ວເຫດຜົນຂອງບຸກຄົນນີ້ກໍຜິດປົກກະຕິທີ່ສຸດ ແລະ ຄົນດັ່ງກ່າວແມ່ນເປັນຜູ້ຊ່ຽວຊານທາງດ້ານທິດສະດີທີ່ຂາດສະຕິຢ່າງບໍ່ຕ້ອງສົງໄສເລີຍ. ເຖິງແມ່ນເຈົ້າບູຊາໂປໂລ, ເຈົ້າກໍບໍ່ສາມາດໃຊ້ຄວາມຮູ້ສຶກທີ່ອົບອຸ່ນຂອງເຈົ້າຕໍ່ເພິ່ນ ເພື່ອບິດເບືອນຄວາມຈິງຂອງຂໍ້ແທ້ຈິງ ຫຼື ເພື່ອໂຕ້ຖຽງການເປັນຢູ່ຂອງຄວາມຈິງ. ຍິ່ງໄປກວ່ານັ້ນ ສິ່ງທີ່ເຮົາໄດ້ກ່າວແມ່ນບໍ່ມີທາງທີ່ຈະເຜົາທຳລາຍຜົນງານ ແລະ ຈົດໝາຍທັງໝົດຂອງໂປໂລໄດ້ ຫຼື ປະຕິເສດຄຸນຄ່າທາງດ້ານການອ້າງອີງຂອງມັນທັງໝົດ. ບໍ່ວ່າແມ່ນຫຍັງກໍຕາມ, ເຈດຕະນາທີ່ເຮົາເວົ້າກໍເພື່ອຈະໃຫ້ພວກເຈົ້າໄດ້ມີຄວາມເຂົ້າໃຈຢ່າງຖືກຕ້ອງ ແລະ ມີການປະເມີນທີ່ສົມເຫດສົມຜົນກ່ຽວກັບສິ່ງຕ່າງໆ ແລະ ຜູ້ຄົນ. ມີແຕ່ສິ່ງນີ້ຄືເຫດຜົນປົກກະຕິ; ມີແຕ່ສິ່ງນີ້ທີ່ຄົນຊອບທຳຜູ້ທີ່ມີຄວາມຈິງຄວນມີໄວ້ກັບຕົວເອງ.

# ຄວາມສຳເລັດ ຫຼື ຄວາມລົ້ມເຫຼວ ແມ່ນຂຶ້ນກັບເສັ້ນທາງມະນຸດຍ່າງ

ຄົນສ່ວນໃຫຍ່ເຊື່ອໃນພຣະເຈົ້າຍ້ອນເຫັນແກ່ຈຸດໝາຍປາຍທາງໃນອະນາຄົດຂອງພວກເຂົາ ຫຼື ຍ້ອນຄວາມສຸກຊົ່ວຄາວ. ສຳລັບຄົນທີ່ບໍ່ໄດ້ຜ່ານການຈັດການຫຍັງເລີຍ, ພວກເຂົາເຊື່ອໃນພຣະເຈົ້າແມ່ນເພື່ອເຂົ້າສູ່ສະຫວັນ, ເພື່ອຮັບເອົາລາງວັນ. ພວກເຂົາບໍ່ໄດ້ເຊື່ອໃນພຣະເຈົ້າເພື່ອຖືກເຮັດໃຫ້ສົມບູນ ຫຼື ປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ. ນັ້ນໝາຍຄວາມວ່າ ຄົນສ່ວນໃຫຍ່ບໍ່ໄດ້ເຊື່ອໃນພຣະເຈົ້າເພື່ອປະຕິບັດຄວາມຮັບຜິດຊອບຂອງພວກເຂົາ ຫຼື ເພື່ອເຮັດໃຫ້ໜ້າທີ່ຂອງພວກເຂົາສຳເລັດ. ມີໜ້ອຍຄັ້ງທີ່ຜູ້ຄົນເຊື່ອໃນພຣະເຈົ້າເພື່ອມີຊີວິດຢ່າງມີຄວາມໝາຍ ຫຼື ມີໜ້ອຍຄັ້ງທີ່ຈະມີຄົນທີ່ເຊື່ອວ່າ ຍ້ອນມະນຸດມີຊີວິດຢູ່ ເຂົາຈຶ່ງສົມຄວນຮັກພຣະເຈົ້າ ເພາະມັນຖືກກຳນົດໄວ້ໂດຍສະຫວັນ ແລະ ຮັບຮູ້ເທິງແຜ່ນດິນໂລກທີ່ຕ້ອງເຮັດແບບນັ້ນ ແລະ ມັນຄືວິຊາຊີບຕາມທຳມະຊາດຂອງມະນຸດ. ໃນລັກສະນະນີ້, ເຖິງແມ່ນວ່າ ແຕ່ລະຄົນຕ່າງສະແຫວງຫາເປົ້າໝາຍຂອງພວກເຂົາເອງ, ຈຸດມຸ່ງໝາຍຂອງການສະແຫວງຫາຂອງພວກເຂົາ ແລະ ແຮງຜັກດັນທີ່ຢູ່ເບື້ອງຫຼັງຂອງການສະແຫວງຫານັ້ນແມ່ນລ້ວນແລ້ວແຕ່ຄືກັນ ແລະ ຍິ່ງໄປກວ່ານັ້ນ ສຳລັບພວກເຂົາສ່ວນໃຫຍ່ແລ້ວ ຈຸດປະສົງຂອງການນະມັດສະການຂອງພວກເຂົາແມ່ນຄືກັນ. ຕະຫຼອດເວລາສອງສາມພັນປີທີ່ຜ່ານມາ, ຜູ້ເຊື່ອຫຼາຍຄົນໄດ້ຕາຍ ແລະ ຫຼາຍຄົນໄດ້ຕາຍ ແລະ ເກີດອີກຄັ້ງ. ບໍ່ແມ່ນພຽງແຕ່ໜຶ່ງ ຫຼື ສອງຄົນເທົ່ານັ້ນທີ່ສະແຫວງຫາພຣະເຈົ້າ ຫຼື ບໍ່ແມ່ນແຕ່ໜຶ່ງ ຫຼື ສອງພັນຄົນ, ເຖິງຢ່າງໃດກໍຕາມ ຄົນເຫຼົ່ານີ້ສ່ວນໃຫຍ່ແມ່ນສະແຫວງຫາເພື່ອເຫັນແກ່ຄວາມຄາດຫວັງຂອງພວກເຂົາເອງ ຫຼື ຄວາມຫວັງໃນອະນາຄົດທີ່ສະຫງ່າງາມຂອງພວກເຂົາ. ຄົນທີ່ອຸທິດຕໍ່ພຣະຄຣິດແມ່ນມີໜ້ອຍຫຼາຍ. ຜູ້ເຊື່ອຫຼາຍຄົນທີ່ເຫຼື້ອມໃສກໍຍັງຕາຍຍ້ອນຕິດດາງແຫຂອງພວກເຂົາເອງ ແລະ ຍິ່ງໄປກວ່ານັ້ນ ຈຳນວນຄົນທີ່ມີໄຊຊະນະແມ່ນມີໜ້ອຍຫຼາຍ. ຈົນເຖິງປັດຈຸບັນ, ສາເຫດທີ່ວ່າເປັນຫຍັງຜູ້ຄົນຈຶ່ງລົ້ມເຫຼວ ຫຼື ຄວາມລັບກ່ຽວກັບໄຊຊະນະຂອງພວກເຂົາກໍຍັງບໍ່ມີໃຜຮູ້. ຄົນທີ່ໝົກໝຸ້ນກັບການສະແຫວງຫາພຣະຄຣິດ ກໍຍັງບໍ່ໄດ້ພົບການເຂົ້າໃຈໂດຍທັນທີ, ພວກເຂົາຍັງບໍ່ໄດ້ລົງເລິກເຖິງຕົ້ນເຫດຂອງຄວາມເລິກລັບເຫຼົ່ານີ້, ເພາະພວກເຂົາບໍ່ຮູ້ຫຍັງເລີຍ. ເຖິງແມ່ນວ່າ ພວກເຂົາພຽນພະຍາຍາມຢ່າງເຈັບປວດໃນການສະແຫວງຫາຂອງພວກເຂົາ, ເສັ້ນທາງທີ່ພວກເຂົາຍ່າງກໍເປັນເສັ້ນທາງແຫ່ງຄວາມລົ້ມເຫຼວທີ່ບັນພະບຸລຸດຂອງພວກເຂົາເຄີຍຍ່າງມາກ່ອນ ແລະ ບໍ່ແມ່ນເສັ້ນທາງແຫ່ງຄວາມສຳເລັດ. ໃນກໍລະນີນີ້, ບໍ່ວ່າພວກເຂົາຈະສະແຫວງຫາແນວໃດກໍຕາມ, ພວກເຂົາບໍ່ແມ່ນຍ່າງຕາມເສັ້ນທາງທີ່ນຳໄປສູ່ຄວາມມືດບໍ? ສິ່ງທີ່ພວກເຂົາໄດ້ຮັບບໍ່ແມ່ນໝາກຜົນທີ່ຂົມຂື່ນບໍ? ມັນຍາກພໍສົມຄວນທີ່ຈະຄາດຄະເນວ່າ ໃນທີ່ສຸດແລ້ວ ຜູ້ຄົນທີ່ຮຽນແບບຄົນທີ່ໄດ້ປະສົບຄວາມສຳເລັດໃນອະດີດນັ້ນ ຈະມີຄວາມໂຊກດີ ຫຼື ຄວາມຈິບຫາຍ. ແລ້ວຈະມີໂອກາດເປັນໄປໄດ້ຫຼາຍສໍ່າໃດສຳລັບຄົນທີ່ສະແຫວງຫາໂດຍຕິດຕາມບາດກ້າວຂອງຄົນທີ່ລົ້ມເຫຼວ? ພວກເຂົາຈະຍິ່ງບໍ່ມີໂອກາດທີ່ຈະລົ້ມເຫຼວຫຼາຍກວ່າເກົ່າບໍ? ແມ່ນຫຍັງຄືຄຸນຄ່າໃນເສັ້ນທາງທີ່ພວກເຂົາຍ່າງ? ພວກເຂົາ

ບໍ່ໄດ້ເສຍເວລາຂອງພວກເຂົາບໍ? ສະຫຼຸບ ບໍ່ວ່າຜູ້ຄົນຈະປະສົບຄວາມສຳເລັດ ຫຼື ລົ້ມເຫຼວໃນການສະແຫວງຫາຂອງພວກເຂົາ, ທຸກການກະທຳແມ່ນມີເຫດຜົນ ແລະ ມັນບໍ່ເປັນຈິງທີ່ວ່າຄວາມສຳເລັດ ຫຼື ຄວາມລົ້ມເຫຼວຂອງພວກເຂົາແມ່ນຖືກກຳນົດໂດຍການສະແຫວງຕາມແບບທີ່ພວກເຂົາມັກ.

ເງື່ອນໄຂພື້ນຖານທີ່ສຸດສຳລັບຄວາມເຊື່ອທີ່ມະນຸດມີໃນພຣະເຈົ້າກໍຄື ເຂົາມີຫົວໃຈທີ່ຊື່ສັດ ແລະ ເຂົາອຸທິດຕົນຢ່າງສົມບູນ ແລະ ເຊື່ອຟັງຢ່າງແທ້ຈິງ. ສິ່ງທີ່ຍາກສຸດສຳລັບມະນຸດແມ່ນການສະໜອງຊີວິດທັງໝົດຂອງເຂົາເພື່ອແລກປ່ຽນກັບຄວາມເຊື່ອທີ່ແທ້ຈິງ ເຊິ່ງຈະເຮັດໃຫ້ເຂົາສາມາດຮັບເອົາຄວາມຈິງທັງໝົດ ແລະ ປະຕິບັດໜ້າທີ່ຂອງເຂົາໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ. ນີ້ແມ່ນສິ່ງທີ່ຄົນລົ້ມເຫຼວບໍ່ສາມາດບັນລຸໄດ້ ແລະ ຄົນທີ່ບໍ່ສາມາດຄົ້ນພົບພຣະຄຣິດກໍແຮງບໍ່ສາມາດບັນລຸມັນໄດ້. ຍ້ອນມະນຸດບໍ່ເກັ່ງໃນການອຸທິດຕົນເອງທັງໝົດໃຫ້ກັບພຣະເຈົ້າ, ຍ້ອນມະນຸດບໍ່ເຕັມໃຈທີ່ຈະປະຕິບັດໜ້າທີ່ຂອງເຂົາຕໍ່ພຣະຜູ້ສ້າງ, ຍ້ອນມະນຸດໄດ້ເຫັນຄວາມຈິງ ແຕ່ຫຼີກເວັ້ນຄວາມຈິງນັ້ນ ແລະ ຍ່າງຕາມເສັ້ນທາງຂອງເຂົາເອງ, ຍ້ອນມະນຸດສະແຫວງຫາໂດຍຕິດຕາມເສັ້ນທາງຂອງຄົນທີ່ລົ້ມເຫຼວຢູ່ສະເໝີ, ຍ້ອນມະນຸດຝ່າຝືນສະຫວັນຢູ່ສະເໝີ ສະນັ້ນ ມະນຸດຈຶ່ງລົ້ມເຫຼວຢູ່ສະເໝີ, ຕົກຢູ່ໃນກົນອຸບາຍຂອງຊາຕານຢູ່ຕະຫຼອດເວລາ ແລະ ຕິດດາງແຫຂອງຕົນເອງ. ຍ້ອນມະນຸດບໍ່ຮູ້ຈັກພຣະຄຣິດ, ຍ້ອນມະນຸດບໍ່ເກັ່ງໃນການເຂົ້າໃຈ ແລະ ຜະເຊີນກັບຄວາມຈິງ, ຍ້ອນມະນຸດນະມັດສະການໂປໂລຫຼາຍເກີນໄປ ແລະ ປາຖະໜາຢາກໄປສະຫວັນຫຼາຍເກີນໄປ, ຍ້ອນມະນຸດຮຽກຮ້ອງໃຫ້ພຣະຄຣິດເຊື່ອຟັງເຂົາຢູ່ສະເໝີ ແລະ ສັ່ງພຣະເຈົ້າໃຫ້ເຮັດແບບນັ້ນແບບນີ້, ສະນັ້ນ ບຸກຄົນທີ່ຍິ່ງໃຫຍ່ເຫຼົ່ານັ້ນ ແລະ ຄົນທີ່ໄດ້ຜະເຊີນກັບຄວາມລຳບາກເທິງແຜ່ນດິນໂລກ ກໍຍັງຕ້ອງຕາຍ ແລະ ຍັງຕາຍໃນລະຫວ່າງການຕີສອນຂອງພຣະເຈົ້າອີກດ້ວຍ. ສິ່ງທີ່ເຮົາເວົ້າໄດ້ ກ່ຽວກັບຄົນປະເພດດັ່ງກ່າວກໍຄື ພວກເຂົາຕາຍຢ່າງອະນາດ ແລະ ຜົນຕາມມາສຳລັບພວກເຂົາກໍຄືຄວາມຕາຍຂອງພວກເຂົາແມ່ນບໍ່ໄດ້ປາສະຈາກເຫດຜົນ. ຄວາມລົ້ມເຫຼວຂອງພວກເຂົາບໍ່ແມ່ນຍິ່ງບໍ່ທົນຕໍ່ກົດເກນແຫ່ງສະຫວັນບໍ? ຄວາມຈິງແມ່ນມາຈາກໂລກຂອງມະນຸດ, ແຕ່ພຣະຄຣິດຖ່າຍທອດຄວາມຈິງທ່າມກາງມະນຸດ. ຄວາມຈິງເລີ່ມຕົ້ນຈາກພຣະຄຣິດ ນັ້ນກໍຄື ຈາກພຣະເຈົ້າເອງ ແລະ ນີ້ບໍ່ແມ່ນສິ່ງທີ່ມະນຸດສາມາດບັນລຸໄດ້. ເຖິງຢ່າງໃດກໍຕາມ ພຣະຄຣິດສະໜອງພຽງຄວາມຈິງ; ພຣະອົງບໍ່ໄດ້ມາເພື່ອຕັດສິນວ່າ ມະນຸດຈະປະສົບຄວາມສຳເລັດໃນການສະແຫວງຫາຄວາມຈິງຂອງເຂົາ ຫຼື ບໍ່. ສະນັ້ນ ຄວາມຈິງຈຶ່ງເປັນໄປດັ່ງນີ້, ຄວາມສຳເລັດ ຫຼື ຄວາມລົ້ມເຫຼວໃນຄວາມຈິງແມ່ນລ້ວນແລ້ວແຕ່ຂຶ້ນກັບການສະແຫວງຫາຂອງມະນຸດ. ຄວາມສຳເລັດ ຫຼື ຄວາມລົ້ມເຫຼວຂອງມະນຸດທີ່ຢູ່ໃນຄວາມຈິງບໍ່ມີຫຍັງກ່ຽວຂ້ອງກັບພຣະຄຣິດ, ແຕ່ກົງກັນຂ້າມ ມັນຖືກກຳນົດໂດຍການສະແຫວງຫາຂອງພວກເຂົາເອງ. ຈຸດໝາຍປາຍທາງຂອງມະນຸດ ແລະ ຄວາມສຳເລັດ ຫຼື ຄວາມລົ້ມເຫຼວຂອງເຂົາບໍ່ສາມາດເອົາມາຢອງຢູ່ເທິງຫົວຂອງພຣະເຈົ້າໄດ້ ເພື່ອໃຫ້ພຣະເຈົ້າແບກຮັບເອົາມັນ, ເພາະວ່າ ນີ້ບໍ່ແມ່ນບັນຫາຂອງພຣະເຈົ້າເອງ, ແຕ່ກ່ຽວຂ້ອງກັບໜ້າທີ່ໆສິ່ງຖືກສ້າງຂອງພຣະເຈົ້າຄວນປະຕິບັດໂດຍກົງ. ຄົນສ່ວນໃຫຍ່ມີຄວາມຮູ້ເລັກນ້ອຍກ່ຽວກັບການສະແຫວງຫາ ແລະ ຈຸດໝາຍປາຍທາງຂອງໂປໂລ ແລະ ເປໂຕ, ແຕ່ຜູ້ຄົນບໍ່ຮູ້ຫຍັງເລີຍ ນອກຈາກຜົນໄດ້ຮັບຂອງ

ເປໂຕ ແລະ ໂປໂລ ແລະ ບໍ່ຮູ້ເຖິງຄວາມລັບທີ່ຢູ່ເບື້ອງຫຼັງຄວາມສຳເລັດຂອງເປໂຕ ຫຼື ຄວາມບົກຜ່ອງທີ່ນຳໄປສູ່ຄວາມລົ້ມເຫຼວຂອງໂປໂລ. ດ້ວຍເຫດນັ້ນ ຖ້າພວກເຈົ້າບໍ່ສາມາດເບິ່ງເຫັນແກ່ນແທ້ຂອງການສະແຫວງຫາຂອງພວກເຂົາຢ່າງສົມບູນ, ແລ້ວການສະແຫວງຫາຂອງພວກເຈົ້າສ່ວນໃຫຍ່ກໍຍັງຈະລົ້ມເຫຼວ ແລະ ເຖິງແມ່ນວ່າ ພວກເຈົ້າຈຳນວນໜ້ອຍຄົນຈະປະສົບຄວາມສຳເລັດ, ພວກເຈົ້າກໍຍັງບໍ່ເທົ່າກັບເປໂຕ. ຖ້າເສັ້ນທາງຂອງການສະແຫວງຫາຂອງເຈົ້າເປັນເສັ້ນທາງທີ່ຖືກຕ້ອງ, ແລ້ວເຈົ້າຈະກໍມີຄວາມຫວັງແຫ່ງຄວາມສຳເລັດ; ຖ້າເສັ້ນທາງທີ່ເຈົ້າຍ່າງໃນການສະແຫວງຫາຄວາມຈິງນັ້ນບໍ່ແມ່ນເສັ້ນທາງທີ່ຖືກຕ້ອງ, ແລ້ວເຈົ້າຈະບໍ່ສາມາດມີຄວາມສຳເລັດຕະຫຼອດໄປ ແລະ ຈະພົບກັບຈຸດຈົບຄືກັນກັບໂປໂລ.

ເປໂຕເປັນມະນຸດທີ່ຖືກເຮັດໃຫ້ສົມບູນ. ຫຼັງຈາກທີ່ໄດ້ຜະເຊີນກັບການຕີສອນ ແລະ ການພິພາກສາ ແລະ ດ້ວຍເຫດນັ້ນກໍ່ໄດ້ຮັບຄວາມຮັກທີ່ບໍລິສຸດສຳລັບພຣະເຈົ້າ, ລາວຈຶ່ງໄດ້ຖືກເຮັດໃຫ້ສົມບູນຢ່າງແທ້ຈິງ; ເສັ້ນທາງທີ່ລາວຍ່າງເປັນເສັ້ນທາງແຫ່ງການຖືກເຮັດໃຫ້ສົມບູນ. ນັ້ນໝາຍຄວາມວ່າ ຕັ້ງແຕ່ເລີ່ມຕົ້ນແລ້ວ, ເສັ້ນທາງທີ່ເປໂຕຍ່າງແມ່ນເສັ້ນທາງທີ່ຖືກຕ້ອງ ແລະ ແຮງຜັກດັນຂອງລາວສຳລັບການເຊື່ອໃນພຣະເຈົ້າກໍເປັນສິ່ງທີ່ຖືກຕ້ອງ ແລະ ດ້ວຍເຫດນັ້ນ ລາວຈຶ່ງກາຍເປັນຄົນທີ່ຖືກເຮັດໃຫ້ສົມບູນ ແລະ ຍ່າງໃນເສັ້ນທາງໃໝ່ທີ່ບໍ່ມີມະນຸດຄົນໃດເຄີຍຍ່າງມາກ່ອນໜ້ານັ້ນ. ເຖິງຢ່າງໃດກໍຕາມ, ເສັ້ນທາງທີ່ໂປໂລຍ່າງຕັ້ງແຕ່ຕອນເລີ່ມຕົ້ນແມ່ນເສັ້ນທາງແຫ່ງການຕໍ່ຕ້ານພຣະຄຣິດ ແລະ ເປັນພຽງຍ້ອນວ່າ ພຣະວິນຍານບໍລິສຸດປາຖະໜາໃຊ້ລາວ ແລະ ສວຍໂອກາດໃຊ້ພອນສະຫວັນຂອງລາວ ແລະ ຄຸນຄວາມດີທັງໝົດຂອງລາວສຳລັບພາລະກິດຂອງພຣະອົງ, ສະນັ້ນ ລາວຈຶ່ງປະຕິບັດພາລະກິດເພື່ອພຣະຄຣິດເປັນເວລາສອງສາມທົດສະວັດ. ລາວພຽງແຕ່ເປັນຄົນທີ່ຖືກພຣະວິນຍານບໍລິສຸດໃຊ້ເທົ່ານັ້ນ ແລະ ລາວບໍ່ໄດ້ຖືກໃຊ້ຍ້ອນພຣະເຢຊູຊື່ນຊົມຄວາມເປັນມະນຸດຂອງລາວ ແຕ່ຍ້ອນພອນສະຫວັນຂອງລາວ. ລາວສາມາດປະຕິບັດພາລະກິດເພື່ອພຣະເຢຊູ ຍ້ອນວ່າລາວຖືກໂຈມຕີ, ບໍ່ແມ່ນຍ້ອນລາວພໍໃຈທີ່ຈະເຮັດແບບນັ້ນ. ລາວສາມາດປະຕິບັດພາລະກິດດັ່ງກ່າວ ຍ້ອນແສງສະຫວ່າງ ແລະ ການນຳພາຂອງພຣະວິນຍານບໍລິສຸດ ແລະ ພາລະກິດທີ່ລາວປະຕິບັດແມ່ນບໍ່ມີທາງເປັນຕົວແທນໃຫ້ກັບການສະແຫວງຫາຂອງລາວ ຫຼື ຄວາມເປັນມະນຸດຂອງລາວໄດ້. ພາລະກິດຂອງໂປໂລເປັນຕົວແທນໃຫ້ກັບພາລະກິດຂອງຜູ້ຮັບໃຊ້ ເຊິ່ງໝາຍຄວາມວ່າ ລາວປະຕິບັດພາລະກິດຂອງອັກຄະສາວົກ. ແຕ່ສຳລັບເປໂຕແມ່ນແຕກຕ່າງ, ລາວໄດ້ປະຕິບັດພາລະກິດບາງຢ່າງເຊັ່ນກັນ; ແລະ ເຖິງແມ່ນວ່າພາລະກິດນັ້ນບໍ່ໄດ້ຍິ່ງໃຫຍ່ສໍ່າພາລະກິດຂອງໂປໂລ, ແຕ່ລາວປະຕິບັດພາລະກິດໃນຂະນະທີ່ກຳລັງສະແຫວງຫາທາງເຂົ້າຂອງລາວເອງ ແລະ ພາລະກິດຂອງລາວແມ່ນແຕກຕ່າງຈາກພາລະກິດຂອງໂປໂລ. ພາລະກິດຂອງເປໂຕແມ່ນການປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ. ລາວບໍ່ໄດ້ປະຕິບັດພາລະກິດໃນບົດບາດຂອງອັກຄະສາວົກ, ແຕ່ເຮັດພາລະກິດໃນຂະນະທີ່ກຳລັງສະແຫວງຫາຄວາມຮັກສຳລັບພຣະເຈົ້າ. ເສັ້ນທາງແຫ່ງພາລະກິດຂອງໂປໂລແມ່ນປະກອບດ້ວຍການສະແຫວງຫາເພື່ອຜົນປະໂຫຍດສ່ວນຕົວຂອງລາວ: ການສະແຫວງຫາຂອງລາວແມ່ນບໍ່ໄດ້ເຫັນແກ່ຫຍັງເລີຍ

ນອກຈາກຄວາມຫວັງສຳລັບອະນາຄົດຂອງລາວ ແລະ ຄວາມປາຖະໜາສຳລັບຈຸດໝາຍປາຍທາງທີ່ດີ. ລາວບໍ່ຍອມຮັບເອົາການຫຼໍ່ຫຼອມໃນລະຫວ່າງປະຕິບັດພາລະກິດຂອງລາວ ຫຼື ລາວບໍ່ຍອມຮັບເອົາການລິຮານ ແລະ ການຈັດການ. ລາວເຊື່ອວ່າ ຕາບໃດທີ່ພາລະກິດທີ່ລາວເຮັດນັ້ນສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ ແລະ ທຸກສິ່ງທີ່ລາວເຮັດນັ້ນເປັນທີ່ພໍໃຈພຣະເຈົ້າ, ແລ້ວໃນທີ່ສຸດ ລາງວັນກໍຈະເປັນຂອງລາວ. ບໍ່ມີປະສົບການສ່ວນຕົວໃນພາລະກິດຂອງລາວ, ພາລະກິດນັ້ນແມ່ນລ້ວນແລ້ວແຕ່ເພື່ອຕົວມັນເອງ ແລະ ບໍ່ໄດ້ປະຕິບັດໃນທ່າມກາງການສະແຫວງຫາເພື່ອປ່ຽນແປງ. ທຸກສິ່ງທີ່ຢູ່ໃນພາລະກິດຂອງລາວແມ່ນປະຕິບັດໃນຮູບແບບທຸລະກິດ, ມັນບໍ່ໄດ້ປະຕິບັດໃນຮູບແບບໜ້າທີ່ ຫຼື ການຍິນຍອມຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ. ໃນລະຫວ່າງເສັ້ນທາງແຫ່ງພາລະກິດຂອງໂປໂລນັ້ນ, ບໍ່ມີການປ່ຽນແປງໃນອຸປະນິໄສເດີມຂອງລາວ. ພາລະກິດຂອງລາວແມ່ນເປັນການບໍລິການຄົນອື່ນເທົ່ານັ້ນ ແລະ ບໍ່ສາມາດນຳການປ່ຽນແປງມາສູ່ອຸປະນິໄສຂອງລາວໄດ້. ໂປໂລປະຕິບັດພາລະກິດຂອງລາວໂດຍກົງ ໂດຍບໍ່ໄດ້ຖືກເຮັດໃຫ້ສົມບູນ ຫຼື ຖືກຈັດການ ແຕ່ລາວຖືກຜັກດັນໂດຍລາງວັນ. ເປໂຕແມ່ນແຕກຕ່າງ: ລາວເປັນຄົນທີ່ຜະເຊີນກັບການລິຮານ ແລະ ການຈັດການ ແລະ ໄດ້ຜະເຊີນກັບການຫຼໍ່ຫຼອມ. ໂດຍພື້ນຖານແລ້ວ ຈຸດປະສົງ ແລະ ແຮງຜັກດັນຂອງພາລະກິດຂອງເປໂຕແຕກຕ່າງຈາກໂປໂລ. ເຖິງແມ່ນເປໂຕບໍ່ໄດ້ປະຕິບັດພາລະກິດຢ່າງຫຼວງຫຼາຍ, ອຸປະນິໄສຂອງລາວແມ່ນໄດ້ຮັບການປ່ຽນແປງຫຼາຍຢ່າງ ແລະ ສິ່ງທີ່ລາວສະແຫວງຫາຄືຄວາມຈິງ ແລະ ການປ່ຽນແປງທີ່ແທ້ຈິງ. ພາລະກິດຂອງລາວບໍ່ໄດ້ຖືກປະຕິບັດໂດຍເຫັນແກ່ພາລະກິດເອງ. ເຖິງແມ່ນວ່າ ໂປໂລປະຕິບັດພາລະກິດຢ່າງຫຼວງຫຼາຍ, ມັນກໍລ້ວນແລ້ວແຕ່ເປັນພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຖິງແມ່ນວ່າ ໂປໂລຮ່ວມມືໃນພາລະກິດນີ້, ລາວກໍບໍ່ໄດ້ປະສົບກັບມັນ. ສິ່ງທີ່ເຮັດໃຫ້ເປໂຕປະຕິບັດພາລະກິດໜ້ອຍກວ່າກໍຍ້ອນວ່າ ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດຜ່ານທາງລາວຢ່າງຫຼວງຫຼາຍ. ຈຳນວນຂອງພາລະກິດຂອງພວກເຂົາບໍ່ໄດ້ກຳນົດວ່າ ພວກເຂົາຖືກເຮັດໃຫ້ສົມບູນ ຫຼື ບໍ່; ການສະແຫວງຫາຂອງຄົນໜຶ່ງແມ່ນເພື່ອຮັບເອົາລາງວັນ ແລະ ອີກຄົນໜຶ່ງແມ່ນເພື່ອບັນລຸຄວາມຮັກທີ່ສູງສຸດສຳລັບພຣະເຈົ້າ ແລະ ປະຕິບັດໜ້າທີ່ຂອງເຂົາໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ, ຈົນເຖິງຂັ້ນທີ່ວ່າ ເຂົາສາມາດດຳລົງຊີວິດຕາມລັກສະນະທີ່ເປັນຕາຮັກເພື່ອປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ. ພວກເຂົາແຕກຕ່າງກັນຢູ່ພາຍນອກ ແລະ ດ້ວຍເຫດນັ້ນ ແກ່ນແທ້ຂອງພວກເຂົາກໍຈຶ່ງແຕກຕ່າງກັນ. ເຈົ້າບໍ່ສາມາດກຳນົດໄດ້ວ່າ ແມ່ນໃຜໃນພວກເຂົາທີ່ຖືກເຮັດໃຫ້ສົມບູນ ໂດຍອີງຕາມຈຳນວນຂອງພາລະກິດທີ່ພວກເຂົາປະຕິບັດ. ເປໂຕສະແຫວງຫາເພື່ອດຳລົງຊີວິດຕາມລັກສະນະຂອງຄົນທີ່ຮັກພຣະເຈົ້າ, ເພື່ອເປັນຄົນທີ່ເຊື່ອຟັງພຣະເຈົ້າ, ເພື່ອເປັນຄົນທີ່ຮັບເອົາການຈັດການ ແລະ ການລິຮານ ແລະ ເພື່ອເປັນຄົນທີ່ປະຕິບັດໜ້າທີ່ຂອງລາວໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ. ລາວສາມາດອຸທິດຕົນເອງໃຫ້ກັບພຣະເຈົ້າ, ນຳທັງໝົດຂອງລາວເອງມາຢູ່ໃນມືຂອງພຣະເຈົ້າ ແລະ ເຊື່ອຟັງພຣະອົງຈົນຕາຍ. ນັ້ນຄືສິ່ງທີ່ລາວຕັດສິນໃຈທີ່ຈະເຮັດ ແລະ ຍິ່ງໄປກວ່ານັ້ນ ນັ້ນຄືສິ່ງທີ່ລາວໄດ້ບັນລຸ. ນີ້ຄືເຫດຜົນພື້ນຖານທີ່ວ່າໃນທີ່ສຸດແລ້ວ ເປັນຫຍັງຜົນໄດ້ຮັບຂອງລາວຈຶ່ງແຕກຕ່າງຈາກຜົນໄດ້ຮັບຂອງໂປໂລ. ພາລະກິດທີ່

ພຣະວິນຍານບໍລິສຸດປະຕິບັດໃນເປໂຕແມ່ນເພື່ອເຮັດໃຫ້ລາວສົມບູນ ແລະ ພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນໂປໂລແມ່ນເພື່ອນຳໃຊ້ລາວ. ນັ້ນກໍເພາະທຳມະຊາດຂອງພວກເຂົາ ແລະ ມຸມມອງຂອງພວກເຂົາຕໍ່ການສະແຫວງຫາແມ່ນບໍ່ຄືກັນ. ທັງສອງມີພາລະກິດຂອງພຣະວິນຍານບໍລິສຸດ. ເປໂຕນຳໃຊ້ພາລະກິດນີ້ກັບຕົວລາວເອງ ແລະ ຍັງສະໜອງພາລະກິດນັ້ນໃຫ້ກັບຄົນອື່ນ; ໃນຂະນະດຽວກັນໂປໂລພຽງແຕ່ສະໜອງທັງໝົດຂອງພາລະກິດຂອງພຣະວິນຍານບໍລິສຸດໃຫ້ກັບຄົນອື່ນ ແລະ ລາວເອງກໍບໍ່ໄດ້ຮັບຜົນຫຍັງເລີຍຈາກພາລະກິດນັ້ນ. ດ້ວຍເຫດນີ້, ຫຼັງຈາກທີ່ລາວໄດ້ພະເຊີນກັບພາລະກິດຂອງພຣະວິນຍານບໍລິສຸດເປັນເວລາຫຼາຍປີ, ການປ່ຽນແປງໃນໂປໂລຈຶ່ງເກືອບບໍ່ມີເລີຍ. ລາວຍັງຢູ່ໃນສະພາວະທຳມະຊາດຂອງລາວ ແລະ ມັນຍັງເປັນໂປໂລໃນເມື່ອກ່ອນຄືເກົ່າ. ມັນເປັນພຽງຍ້ອນຫຼັງຈາກການອົດທົນຕໍ່ຄວາມລຳບາກຈາກພາລະກິດເປັນເວລາຫຼາຍປີ, ລາວຈຶ່ງຮຽນຮູ້ວິທີ "ປະຕິບັດພາລະກິດ" ແລະ ຮຽນຮູ້ເຖິງຄວາມອົດກັ້ນ, ແຕ່ທຳມະຊາດດັ້ງເດີມຂອງລາວທີ່ເປັນທຳມະຊາດທີ່ມັກໃນການແຂ່ງຂັນສູງ ແລະ ມັກຄ້າຂາຍ ກໍຍັງຄົງຢູ່ຄືເກົ່າ. ຫຼັງຈາກປະຕິບັດພາລະກິດເປັນເວລາຫຼາຍປີ, ລາວບໍ່ຮູ້ຈັກອຸປະນິໄສທີ່ເສື່ອມຊາມຂອງຕົນເອງ ຫຼື ລາວບໍ່ປະຖິ້ມອຸປະນິໄສເກົ່າອອກຈາກຕົນເອງ ແລະ ອຸປະນິໄສນັ້ນກໍຍັງສາມາດເຫັນໄດ້ໃນພາລະກິດຂອງລາວ. ໃນຕົວລາວນັ້ນ ມີພຽງປະສົບການກ່ຽວກັບພາລະກິດ, ແຕ່ປະສົບການເລັກນ້ອຍພຽງຢ່າງດຽວແມ່ນບໍ່ສາມາດປ່ຽນແປງລາວໄດ້ ແລະບໍ່ສາມາດປ່ຽນແປງມຸມມອງຂອງລາວກ່ຽວກັບການເປັນຢູ່ ຫຼື ຄວາມສຳຄັນຂອງການສະແຫວງຫາຂອງລາວໄດ້. ເຖິງແມ່ນວ່າ ລາວປະຕິບັດພາລະກິດເພື່ອພຣະຄຣິດເປັນເວລາຫຼາຍປີ ແລະ ບໍ່ເຄີຍຂົ່ມເຫັງພຣະເຢຊູເຈົ້າຈັກເທື່ອ, ໃນຫົວໃຈຂອງລາວນັ້ນ ບໍ່ມີການປ່ຽນແປງໃນຄວາມຮູ້ທີ່ລາວມີກ່ຽວກັບພຣະເຈົ້າເລີຍ. ນີ້ໝາຍຄວາມວ່າ ລາວບໍ່ໄດ້ປະຕິບັດພາລະກິດເພື່ອອຸທິດຕົນໃຫ້ກັບພຣະເຈົ້າ, ແຕ່ກົງກັນຂ້າມ ລາວຖືກບັງຄັບໃຫ້ປະຕິບັດພາລະກິດໂດຍເຫັນແກ່ຈຸດໝາຍປາຍທາງໃນອະນາຄົດຂອງລາວ. ຍ້ອນວ່າໃນຕອນເລີ່ມຕົ້ນນັ້ນ ລາວໄດ້ຂົ່ມເຫັງພຣະຄຣິດ ແລະ ບໍ່ຍອມອ່ອນນ້ອມຕໍ່ພຣະຄຣິດ; ລາວເປັນກະບົດໂດຍທຳມະຊາດ ຜູ້ເຊິ່ງຕໍ່ຕ້ານພຣະຄຣິດໂດຍເຈດຕະນາ ແລະ ເປັນຄົນທີ່ບໍ່ມີຄວາມຮູ້ກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ. ເມື່ອພາລະກິດຂອງລາວເກືອບຈະສິ້ນສຸດລົງ, ລາວຍັງບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ ແລະ ພຽງແຕ່ປະພຶດຕາມຄວາມຕ້ອງການຂອງລາວເອງ ອີງຕາມລັກສະນະຂອງລາວເອງ ໂດຍບໍ່ສົນໃຈຄວາມປະສົງຂອງພຣະວິນຍານບໍລິສຸດແມ່ນແຕ່ໜ້ອຍດຽວ. ແລ້ວດ້ວຍເຫດນັ້ນ ທຳມະຊາດຂອງລາວຈຶ່ງເປັນສັດຕູກັບພຣະຄຣິດ ແລະ ບໍ່ເຊື່ອຟັງຄວາມຈິງ. ຄົນແບບນີ້ ຜູ້ເຊິ່ງຖືກພາລະກິດຂອງພຣະວິນຍານບໍລິສຸດປະຖິ້ມ, ຜູ້ເຊິ່ງບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ ແລະ ຜູ້ທີ່ຍັງຕໍ່ຕ້ານພຣະຄຣິດ, ຄົນປະເພດນີ້ຈະຮັບຄວາມລອດພົ້ນໄດ້ແນວໃດ? ບໍ່ວ່າມະນຸດຈະສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ ຫຼື ບໍ່ ແມ່ນບໍ່ໄດ້ຂຶ້ນກັບຈຳນວນພາລະກິດທີ່ເຂົາປະຕິບັດ ຫຼື ເຂົາອຸທິດຕົນຫຼາຍສໍ່າໃດ, ແຕ່ກົງກັນຂ້າມ ມັນຖືກກຳນົດດ້ວຍຄຳຖາມທີ່ວ່າເຂົາຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ ຫຼື ບໍ່, ເຂົາສາມາດນຳຄວາມຈິງເຂົ້າສູ່ການປະຕິບັດ ຫຼື ບໍ່ ແລະ ມຸມມອງຂອງເຂົາທີ່ມີຕໍ່ການສະແຫວງຫານັ້ນ ສອດຄ່ອງກັບຄວາມຈິງ ຫຼື ບໍ່.

ເຖິງແມ່ນວ່າການເປີດເຜີຍໂດຍທຳມະຊາດໄດ້ເກີດຂຶ້ນຫຼັງຈາກທີ່ເປໂຕເລີ່ມຕິດຕາມພຣະເຢຊູ ແຕ່ໃນທຳມະຊາດແລ້ວ ຕັ້ງແຕ່ຕົ້ນມາ ລາວເປັນຄົນທີ່ເຕັມໃຈຍອມອ່ອນນ້ອມຕໍ່ພຣະວິນຍານບໍລິສຸດ ແລະ ສະແຫວງຫາພຣະຄຣິດ. ການເຊື່ອຂອງລາວທີ່ມີຕໍ່ພຣະວິນຍານບໍລິສຸດ ນັ້ນກໍຄື ລາວບໍ່ໄດ້ສະແຫວງຫາຊື່ສຽງ ແລະ ຊັບສິນ, ແຕ່ກົງກັນຂ້າມ ລາວໄດ້ຮັບການດົນບັນດານໃຈຈາກການເຊື່ອຟັງຄວາມຈິງ. ເຖິງແມ່ນວ່າ ມີສາມຄັ້ງທີ່ເປໂຕປະຕິເສດບໍ່ຮູ້ຈັກພຣະຄຣິດ ແລະ ເຖິງແມ່ນວ່າ ລາວທົດລອງອົງພຣະເຢຊູເຈົ້າ, ຄວາມບົກຜ່ອງເລັກນ້ອຍແບບນັ້ນຂອງມະນຸດບໍ່ກ່ຽວຂ້ອງກັບທຳມະຊາດຂອງລາວ, ມັນບໍ່ມີຜົນກະທົບຕໍ່ການສະແຫວງຫາໃນອະນາຄົດຂອງລາວ ແລະ ມັນບໍ່ສາມາດພິສູດຢ່າງພຽງພໍວ່າ ການທົດລອງນັ້ນເປັນການກະທຳຂອງຜູ້ຕໍ່ຕ້ານພຣະຄຣິດ. ຄວາມບົກຜ່ອງຂອງມະນຸດແມ່ນສິ່ງທີ່ທຸກຄົນໃນແຜ່ນດິນໂລກມີ, ເຈົ້າຄາດຫວັງໃຫ້ເປໂຕແຕກຕ່າງບໍ? ຜູ້ຄົນບໍ່ໄດ້ມີມຸມມອງບາງຢ່າງກ່ຽວກັບເປໂຕ ຍ້ອນວ່າລາວເຮັດຜິດພາດຢ່າງໂງ່ຈ້າຫຼາຍຄັ້ງບໍ? ແລ້ວຜູ້ຄົນບໍ່ໄດ້ເຄົາລົບໂປໂລ ຍ້ອນພາລະກິດທຸກຢ່າງທີ່ລາວເຮັດ ແລະ ຈົດໝາຍທຸກສະບັບທີ່ລາວຂຽນບໍ? ມະນຸດຈະສາມາດເຫັນທາດແທ້ຂອງມະນຸດໄດ້ແນວໃດ? ແນ່ນອນ ຄົນທີ່ມີສະຕິແທ້ຈິງຈະສາມາດເຫັນສິ່ງທີ່ບໍ່ມີຄວາມສຳຄັນແບບນັ້ນບໍ? ເຖິງແມ່ນປະສົບການທີ່ເຈັບປວດຫຼາຍປີຂອງເປໂຕບໍ່ໄດ້ຖືກບັນທຶກໄວ້ໃນພຣະຄຳພີ, ນີ້ກໍບໍ່ໄດ້ພິສູດວ່າ ເປໂຕບໍ່ມີປະສົບການທີ່ແທ້ຈິງເລີຍ ຫຼື ເປໂຕບໍ່ໄດ້ຖືກເຮັດໃຫ້ສົມບູນ. ມະນຸດຈະສາມາດຢັ່ງຮູ້ພາລະກິດຂອງພຣະເຈົ້າໄດ້ຢ່າງສົມບູນໄດ້ແນວໃດ? ການບັນທຶກໃນພຣະຄຳພີບໍ່ໄດ້ຖືກຄັດເລືອກໂດຍພຣະເຢຊູເອງ, ແຕ່ຖືກຮວບຮວມໂດຍຄົນລຸ້ນຕໍ່ມາ. ເມື່ອເວົ້າແບບນັ້ນ, ທຸກສິ່ງທີ່ບັນທຶກໃນພຣະຄຳພີບໍ່ແມ່ນຖືກເລືອກເອົາຕາມແນວຄິດຂອງມະນຸດບໍ? ຍິ່ງໄປກວ່ານັ້ນ, ຜົນໄດ້ຮັບຂອງເປໂຕ ແລະ ໂປໂລແມ່ນບໍ່ໄດ້ຖືກລະບຸໄວ້ໃນຈົດໝາຍຢ່າງຈະແຈ້ງ ສະນັ້ນ ມະນຸດຈຶ່ງຕັດສິນເປໂຕ ແລະ ໂປໂລຕາມຄວາມເຂົ້າໃຈຂອງພວກເຂົາເອງ ແລະ ຕາມຄວາມພຶງພໍໃຈຂອງພວກເຂົາເອງ. ແລ້ວຍ້ອນໂປໂລປະຕິບັດພາລະກິດຫຼາຍຢ່າງ, ຍ້ອນ "ການປະກອບສ່ວນ" ຂອງລາວຍິ່ງໃຫຍ່ຫຼາຍ, ລາວຈຶ່ງໄດ້ເອົາຊະນະຄວາມໄວ້ໃຈຂອງຝູງຊົນ. ມະນຸດບໍ່ໄດ້ຕັ້ງໃຈໃສ່ແຕ່ໃນເລື່ອງຜິວເຜີນເທົ່ານັ້ນບໍ? ມະນຸດຈະສາມາດເຫັນທາດແທ້ຂອງມະນຸດໄດ້ແນວໃດ? ນອກຈາກນັ້ນ, ໃນເມື່ອໂປໂລເປັນເປົ້າໝາຍແຫ່ງການນະມັດສະການເປັນເວລາຫຼາຍພັນປີ, ແມ່ນໃຜກ້າທີ່ຈະປະຕິເສດພາລະກິດຂອງລາວໂດຍບໍ່ມີເຫດຜົນ? ເປໂຕເປັນພຽງຄົນຫາປາ, ແລ້ວການປະກອບສ່ວນຂອງລາວຈະຍິ່ງໃຫຍ່ສໍ່າກັບໂປໂລໄດ້ແນວໃດ? ໃນເລື່ອງການປະກອບສ່ວນທີ່ພວກເຂົາມີ, ໂປໂລຄວນໄດ້ຮັບລາງວັນກ່ອນເປໂຕ ແລະ ລາວຄວນເປັນຄົນທີ່ມີຄຸນສົມບັດຫຼາຍກວ່າທີ່ຈະຮັບເອົາການເຫັນດີຈາກພຣະເຈົ້າ. ແມ່ນຜູ້ໃດຈະສາມາດຈິນຕະນາການໄດ້ວ່າ ການທີ່ພຣະອົງປະຕິບັດຕໍ່ໂປໂລນັ້ນ ພຣະເຈົ້າພຽງແຕ່ເຮັດໃຫ້ລາວປະຕິບັດພາລະກິດຜ່ານພອນສະຫວັນຂອງລາວເທົ່ານັ້ນ ແຕ່ສຳລັບເປໂຕພຣະເຈົ້າເຮັດໃຫ້ລາວສົມບູນ. ມັນບໍ່ແມ່ນໃນກໍລະນີທີ່ພຣະເຢຊູເຈົ້າໄດ້ວາງແຜນສຳລັບເປໂຕ ແລະ ໂປໂລຕັ້ງແຕ່ຕອນເລີ່ມຕົ້ນ, ກົງກັນຂ້າມ ພວກເຂົາຖືກເຮັດໃຫ້ສົມບູນ ຫຼື ນຳເຂົ້າສູ່ພາລະກິດຕາມທຳມະຊາດທີ່ມີມາແຕ່ເກີດຂອງພວກເຂົາ. ດ້ວຍເຫດນັ້ນ ສິ່ງທີ່ຜູ້ຄົນເຫັນແມ່ນເປັນພຽງການປະກອບສ່ວນພາຍນອກຂອງມະນຸດ

ເທົ່ານັ້ນ ໃນຂະນະທີ່ສິ່ງທີ່ພຣະເຈົ້າເຫັນແມ່ນທາດແທ້ຂອງມະນຸດ ພ້ອມທັງເສັ້ນທາງທີ່ມະນຸດສະແຫວງຫາຕັ້ງແຕ່ຕອນເລີ່ມຕົ້ນ ແລະ ແຮງຜັກດັນທີ່ຢູ່ເບື້ອງຫຼັງການສະແຫວງຫາຂອງມະນຸດ. ຜູ້ຄົນວັດແທກມະນຸດຕາມແນວຄິດຂອງພວກເຂົາ ແລະ ອີງຕາມຄວາມເຂົ້າໃຈຂອງພວກເຂົາເອງ, ແຕ່ຜົນໄດ້ຮັບຂັ້ນສຸດທ້າຍຂອງມະນຸດແມ່ນບໍ່ໄດ້ຖືກກຳນົດຕາມລັກສະນະພາຍນອກຂອງເຂົາ. ດ້ວຍເຫດນັ້ນ ເຮົາຈຶ່ງກ່າວວ່າ ຖ້າເສັ້ນທາງທີ່ເຈົ້າຍ່າງຕັ້ງແຕ່ຕົ້ນແມ່ນເສັ້ນທາງແຫ່ງຄວາມສຳເລັດ ແລະ ທັດສະນະມຸມມອງຂອງເຈົ້າທີ່ມີຕໍ່ການສະແຫວງຫານັ້ນເປັນສິ່ງທີ່ຖືກຕ້ອງຕັ້ງແຕ່ຕົ້ນ, ແລ້ວເຈົ້າກໍເປັນຄືກັບເປໂຕ; ຖ້າເສັ້ນທາງທີ່ເຈົ້າຍ່າງແມ່ນເສັ້ນທາງແຫ່ງຄວາມລົ້ມເຫຼວ, ແລ້ວບໍ່ວ່າເຈົ້າຈະຈ່າຍລາຄາດ້ວຍຫຍັງກໍຕາມ, ຜົນໄດ້ຮັບຂອງເຈົ້າກໍຈະເປັນຄືກັບໂປໂລ. ບໍ່ວ່າໃນກໍລະນີໃດກໍຕາມ, ຈຸດໝາຍປາຍທາງຂອງເຈົ້າ ແລະ ບໍ່ວ່າເຈົ້າຈະສຳເລັດ ຫຼື ລົ້ມເຫຼວ ທັງສອງຢ່າງແມ່ນຖືກກຳນົດໂດຍເສັ້ນທາງທີ່ເຈົ້າສະແຫວງຫານັ້ນ ຖືກຕ້ອງ ຫຼື ບໍ່, ແທນທີ່ຈະເປັນການອຸທິດຂອງພວກເຈົ້າ ຫຼື ລາຄາທີ່ພວກເຈົ້າຈ່າຍ. ແກ່ນແທ້ຂອງເປໂຕ ແລະ ໂປໂລ ແລະ ເປົ້າໝາຍທີ່ພວກເຂົາສະແຫວງຫານັ້ນ ແມ່ນແຕກຕ່າງກັນ; ມະນຸດບໍ່ສາມາດຄົ້ນພົບສິ່ງເຫຼົ່ານີ້ໄດ້ ແລະ ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຮູ້ຈັກພວກເຂົາຢ່າງຄົບຖ້ວນໄດ້. ຍ້ອນສິ່ງທີ່ພຣະເຈົ້າເຫັນແມ່ນທາດແທ້ຂອງມະນຸດ ໃນຂະນະທີ່ມະນຸດບໍ່ຮູ້ຫຍັງເລີຍກ່ຽວກັບແກ່ນແທ້ຂອງເຂົາເອງ. ມະນຸດບໍ່ສາມາດເຫັນແກ່ນແທ້ທີ່ຢູ່ພາຍໃນມະນຸດ ຫຼື ວຸດທິພາວະທີ່ແທ້ຈິງຂອງເຂົາໄດ້ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ສາມາດຄົ້ນພົບເຫດຜົນຄວາມລົ້ມເຫຼວ ແລະ ຄວາມສຳເລັດຂອງໂປໂລ ແລະ ເປໂຕໄດ້. ເຫດຜົນທີ່ວ່າ ເປັນຫຍັງຄົນສ່ວນໃຫຍ່ຈຶ່ງນະມັດສະການໂປໂລ ແລະ ບໍ່ແມ່ນເປໂຕນັ້ນແມ່ນຍ້ອນວ່າໂປໂລຖືກໃຊ້ສຳລັບພາລະກິດທີ່ເປີດເຜີຍສູ່ປວງຊົນທົ່ວໄປ ແລະ ມະນຸດສາມາດເຂົ້າໃຈພາລະກິດນີ້ໄດ້ ແລະ ດ້ວຍເຫດນັ້ນ ຜູ້ຄົນຈຶ່ງຮັບຮູ້ "ຜົນສຳເລັດ" ຂອງໂປໂລ. ໃນຂະນະດຽວກັນ ມະນຸດບໍ່ສາມາດເຫັນປະສົບການຂອງເປໂຕໄດ້ ແລະ ມະນຸດບໍ່ສາມາດເບິ່ງເຫັນສິ່ງທີ່ລາວສະແຫວງຫາໄດ້, ດ້ວຍເຫດນັ້ນ ມະນຸດຈຶ່ງບໍ່ສົນໃຈເປໂຕ.

ເປໂຕຖືກເຮັດໃຫ້ສົມບູນຜ່ານການຜະເຊີນກັບການຈັດການ ແລະ ການຫຼໍ່ຫຼອມ. ລາວເວົ້າວ່າ "ຂ້ານ້ອຍຕ້ອງປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າຢູ່ຕະຫລອດເວລາ. ໃນທຸກສິ່ງທີ່ຂ້ານ້ອຍເຮັດ ຂ້ານ້ອຍຕ້ອງສະແຫວງຫາເພື່ອປະຕິບັດຕາມຄວາມປະສົງຂອງພຣະເຈົ້າເທົ່ານັ້ນ ແລະ ບໍ່ວ່າຂ້ານ້ອຍຈະຖືກຕີສອນ ຫຼື ຖືກພິພາກສາ, ຂ້ານ້ອຍກໍຍັງມີຄວາມສຸກທີ່ຈະເຮັດແບບນັ້ນ". ເປໂຕມອບທັງໝົດຂອງລາວໃຫ້ກັບພຣະເຈົ້າ; ພາລະກິດ, ຄຳເວົ້າ ແລະ ຊີວິດທັງໝົດຂອງລາວກໍລ້ວນແລ້ວແຕ່ເພື່ອເຫັນແກ່ການຮັກພຣະເຈົ້າ. ລາວເປັນຄົນທີ່ສະແຫວງຫາຄວາມບໍລິສຸດ ແລະ ຍິ່ງລາວມີປະສົບການຫຼາຍສໍ່າໃດ, ຄວາມຮັກຂອງລາວທີ່ມີຕໍ່ພຣະເຈົ້າໃນສ່ວນເລິກທີ່ຢູ່ພາຍໃນຫົວໃຈຂອງລາວກໍຍິ່ງມີຫຼາຍສໍ່ານັ້ນ. ໃນຂະນະດຽວກັນ ໂປໂລປະຕິບັດພຽງແຕ່ພາລະກິດພາຍນອກເທົ່ານັ້ນ ແລະ ເຖິງແມ່ນລາວປະຕິບັດພາລະກິດຢ່າງໜັກເຊັ່ນກັນ, ຄວາມພະຍາຍາມຂອງລາວແມ່ນເຫັນແກ່ການປະຕິບັດພາລະກິດໃຫ້ຖືກຕ້ອງ ແລະ ເພື່ອການຮັບເອົາລາງວັນ. ຖ້າລາວຮູ້ວ່າ ລາວຈະບໍ່ໄດ້ຮັບລາງວັນຫຍັງເລີຍ, ລາວກໍຈະສະລະພາລະກິດຂອງລາວ. ສິ່ງທີ່ເປໂຕສົນໃຈແມ່ນຄວາມຮັກແທ້ຈິງທີ່ຢູ່ພາຍໃນຫົວໃຈຂອງລາວ

ແລະ ສິ່ງທີ່ເປັນຈິງ ແລະ ສາມາດບັນລຸໄດ້. ລາວບໍ່ສົນໃຈວ່າ ລາວຈະໄດ້ຮັບລາງວັນ ຫຼື ບໍ່, ແຕ່ສົນໃຈວ່າ ອຸປະນິໄສຂອງລາວຈະສາມາດປ່ຽນແປງໄດ້ ຫຼື ບໍ່. ໂປໂລສົນໃຈໃນການປະຕິບັດພາລະກິດໃຫ້ຫຼາຍຂຶ້ນກວ່າເກົ່າ, ລາວສົນໃຈກັບພາລະກິດພາຍນອກ ແລະ ການອຸທິດຕົນ ແລະ ກ່ຽວກັບຄຳສັ່ງສອນທີ່ຜູ້ຄົນທຳມະດາບໍ່ໄດ້ຜະເຊີນ. ລາວບໍ່ໄດ້ສົນໃຈໃນການປ່ຽນແປງທີ່ຢູ່ໃນສ່ວນເລິກພາຍໃນລາວ ຫຼື ສົນໃຈໃນຄວາມຮັກແທ້ຈິງທີ່ມີຕໍ່ພຣະເຈົ້າ. ປະສົບການຂອງເປໂຕແມ່ນເພື່ອບັນລຸຄວາມຮັກແທ້ຈິງ ແລະ ຄວາມຮູ້ແທ້ຈິງກ່ຽວກັບພຣະເຈົ້າ. ປະສົບການຂອງລາວແມ່ນເພື່ອຮັບເອົາຄວາມສຳພັນທີ່ໃກ້ຊິດກັບພຣະເຈົ້າຫຼາຍຂຶ້ນ ແລະ ເພື່ອມີການດຳລົງຊີວິດຕາມຄວາມເປັນຈິງ. ພາລະກິດຂອງໂປໂລແມ່ນຖືກປະຕິບັດຍ້ອນສິ່ງທີ່ພຣະເຢຊູຝາກຝັງໄວ້ກັບລາວ ແລະ ເພື່ອຮັບເອົາສິ່ງທີ່ລາວປາຖະໜາ, ແຕ່ສິ່ງເຫຼົ່ານີ້ແມ່ນບໍ່ກ່ຽວຂ້ອງກັບຄວາມຮູ້ທີ່ລາວມີກ່ຽວກັບຕົນເອງ ແລະ ພຣະເຈົ້າ. ພາລະກິດຂອງລາວແມ່ນເຫັນແກ່ການຫຼີກເວັ້ນການຕີສອນ ແລະ ການພິພາກສາເທົ່ານັ້ນ. ສິ່ງທີ່ເປໂຕສະແຫວງຫາແມ່ນຄວາມຮັກທີ່ບໍລິສຸດ ແລະ ສິ່ງທີ່ໂປໂລສະແຫວງຫາແມ່ນມົງກຸດແຫ່ງຄວາມຊອບທຳ. ເປໂຕຜະເຊີນກັບພາລະກິດຂອງພຣະວິນຍານບໍລິສຸດເປັນເວລາຫຼາຍປີ ແລະ ມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະຄຣິດ ພ້ອມທັງຄວາມຮູ້ທີ່ເລິກເຊິ່ງກ່ຽວກັບຕົນເອງ. ດ້ວຍເຫດນີ້ ຄວາມຮັກທີ່ລາວມີຕໍ່ພຣະເຈົ້າຈຶ່ງບໍລິສຸດ. ການຫຼໍ່ຫຼອມເປັນເວລາຫຼາຍປີໄດ້ຍົກລະດັບຄວາມຮູ້ຂອງລາວກ່ຽວກັບພຣະເຢຊູ ແລະ ຊີວິດ ແລະ ຄວາມຮັກຂອງລາວແມ່ນເປັນຄວາມຮັກທີ່ບໍ່ມີເງື່ອນໄຂ, ມັນເປັນຄວາມຮັກໂດຍທຳມະຊາດ ແລະ ລາວບໍ່ໄດ້ຮຽກຮ້ອງຫຍັງເປັນການຕອບແທນ ຫຼື ລາວບໍ່ໄດ້ຄາດຫວັງເອົາຜົນປະໂຫຍດໃດໆ. ໂປໂລປະຕິບັດພາລະກິດເປັນເວລາຫຼາຍປີ ແຕ່ລາວກໍບໍ່ມີຄວາມຮູ້ຫຍັງຫຼາຍກ່ຽວກັບພຣະຄຣິດ ແລະ ຄວາມຮູ້ທີ່ລາວມີກ່ຽວກັບຕົນເອງກໍໜ້ອຍຫຼາຍ. ລາວບໍ່ມີຄວາມຮັກສຳລັບພຣະຄຣິດ ແລະ ພາລະກິດຂອງລາວ ແລະ ເສັ້ນທາງທີ່ລາວແລ່ນກໍແມ່ນເພື່ອຮັບເອົາພວງມາໄລສຸດທ້າຍ. ສິ່ງທີ່ລາວສະແຫວງຫາແມ່ນມົງກຸດທີ່ດີທີ່ສຸດ ບໍ່ແມ່ນຄວາມຮັກທີ່ບໍລິສຸດທີ່ສຸດ. ລາວບໍ່ໄດ້ສະແຫວງຫາຢ່າງຫ້າວຫັນ ແຕ່ເປັນການສະແຫວງຫາແບບຂີ້ຄ້ານ; ລາວບໍ່ໄດ້ປະຕິບັດໜ້າທີ່ຂອງຕົນ, ແຕ່ຖືກບັງຄັບໃຫ້ລາວສະແຫວງຫາຫຼັງຈາກທີ່ຖືກຄອບຄອງໂດຍພາລະກິດຂອງພຣະວິນຍານບໍລິສຸດ. ດ້ວຍເຫດນີ້ ການສະແຫວງຫາຂອງລາວຈຶ່ງບໍ່ໄດ້ພິສູດວ່າ ລາວເປັນສິ່ງຖືກສ້າງທີ່ມີຄຸນສົມບັດຂອງພຣະເຈົ້າ; ມັນແມ່ນເປໂຕທີ່ເປັນສິ່ງຖືກສ້າງທີ່ມີຄຸນສົມບັດຂອງພຣະເຈົ້າ ຜູ້ເຊິ່ງປະຕິບັດພາລະກິດຂອງລາວ. ມະນຸດຄິດວ່າ ທຸກຄົນທີ່ປະກອບສ່ວນຮ່ວມກັບພຣະເຈົ້າ ຄວນໄດ້ຮັບລາງວັນ ແລະ ຍິ່ງມີການປະກອບສ່ວນຍິ່ງໃຫຍ່ຫຼາຍສໍ່າໃດພວກເຂົາກໍນຶກເອົາເອງວ່າພວກເຂົາຄວນໄດ້ຮັບຄວາມກະລຸນາຂອງພຣະເຈົ້າຫຼາຍສໍ່ານັ້ນ. ແກ່ນແທ້ໃນມຸມມອງຂອງມະນຸດແມ່ນກ່ຽວກັບການເຮັດທຸລະກິດ ແລະ ເຂົາບໍ່ສະແຫວງຫາເພື່ອປະຕິບັດໜ້າທີ່ຂອງເຂົາໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າຢ່າງຫ້າວຫັນ. ສຳລັບພຣະເຈົ້າແລ້ວ ຍິ່ງຜູ້ຄົນສະແຫວງຫາຄວາມຮັກແທ້ຈິງສຳລັບພຣະເຈົ້າ ແລະ ເຊື່ອຟັງພຣະເຈົ້າຢ່າງສົມບູນຫຼາຍສໍ່າໃດ ເຊິ່ງໝາຍຄວາມວ່າ ການສະແຫວງຫາເພື່ອປະຕິບັດໜ້າທີ່ຂອງພວກເຂົາໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ, ພວກເຂົາກໍຍິ່ງສາມາດຮັບເອົາການເຫັນດີຈາກພຣະເຈົ້າຫຼາຍສໍ່ານັ້ນ. ມຸມມອງຂອງພຣະເຈົ້າຄືການ

ຮຽກຮ້ອງໃຫ້ມະນຸດຟື້ນຟູໜ້າທີ່ ແລະ ສະຖານະດັ້ງເດີມຂອງພວກເຂົາ. ມະນຸດເປັນສິ່ງຖືກສ້າງຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງບໍ່ຄວນກ້າວລ່ວງຕົນເອງໂດຍຮຽກຮ້ອງຈາກພຣະເຈົ້າ ແລະ ບໍ່ຄວນເຮັດຫຍັງ ນອກຈາກປະຕິບັດໜ້າທີ່ຂອງເຂົາໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ. ຈຸດໝາຍປາຍທາງຂອງໂປໂລ ແລະ ເປໂຕແມ່ນຖືກວັດແທກຕາມຄຳຖາມທີ່ວ່າ ພວກເຂົາສາມາດປະຕິບັດໜ້າທີ່ຂອງພວກເຂົາໃນຖານະສິ່ງຖືກສ້າງຂອງພຣະເຈົ້າ ຫຼື ບໍ່ ແລະ ບໍ່ແມ່ນຕາມຂະໜາດຂອງການປະກອບສ່ວນຂອງພວກເຂົາ; ຈຸດໝາຍປາຍທາງຂອງພວກເຂົາແມ່ນຖືກກຳນົດຕາມສິ່ງທີ່ພວກເຂົາສະແຫວງຫາຕັ້ງແຕ່ຕົ້ນ, ບໍ່ແມ່ນຕາມຈຳນວນພາລະກິດທີ່ພວກເຂົາເຮັດ ຫຼື ຕາມການທີ່ຄົນອື່ນປະເມີນຄ່າຂອງພວກເຂົາ. ດ້ວຍເຫດນັ້ນ ການສະແຫວງຫາເພື່ອປະຕິບັດໜ້າທີ່ຂອງຕົນໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ ຈຶ່ງເປັນເສັ້ນທາງສູ່ຄວາມສຳເລັດ; ການສະແຫວງຫາເສັ້ນທາງເພື່ອຮັກພຣະເຈົ້າຢ່າງແທ້ຈິງຈຶ່ງແມ່ນເສັ້ນທາງທີ່ຖືກຕ້ອງທີ່ສຸດ; ການສະແຫວງຫາການປ່ຽນແປງໃນອຸປະນິໄສເກົ່າຂອງຕົນ ແລະ ການສະແຫວງຫາຄວາມຮັກບໍລິສຸດສຳລັບພຣະເຈົ້າ ແມ່ນເສັ້ນທາງສູ່ຄວາມສຳເລັດ. ເສັ້ນທາງສູ່ຄວາມສຳເລັດດັ່ງກ່າວແມ່ນເສັ້ນທາງແຫ່ງການຟື້ນຟູໜ້າທີ່ດັ້ງເດີມ ພ້ອມທັງລັກສະນະດັ້ງເດີມຂອງສິ່ງຖືກສ້າງຂອງພຣະເຈົ້າ. ມັນຄືເສັ້ນທາງແຫ່ງການຟື້ນຟູ ແລະ ມັນຍັງເປັນຈຸດປະສົງຂອງພາລະກິດທັງໝົດຂອງພຣະເຈົ້າມາຕັ້ງແຕ່ຕົ້ນຈົນຈົບ. ຖ້າການສະແຫວງຫາຂອງມະນຸດຖືກເປິເປື້ອນດ້ວຍຄວາມຕ້ອງການສ່ວນຕົວທີ່ເກີນຂອບເຂດ ແລະ ຄວາມປາຖະໜາທີ່ບໍ່ມີເຫດຜົນ, ແລ້ວຜົນທີ່ໄດ້ຮັບກໍຈະບໍ່ແມ່ນການປ່ຽນແປງໃນອຸປະນິໄສຂອງມະນຸດ. ສິ່ງນີ້ບໍ່ສອດຄ່ອງກັບພາລະກິດແຫ່ງການຟື້ນຟູ. ແນ່ນອນ ມັນບໍ່ແມ່ນພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດ ແລະ ດ້ວຍເຫດນັ້ນສິ່ງນີ້ຈຶ່ງພິສູດວ່າ ພຣະເຈົ້າບໍ່ເຫັນດ້ວຍກັບການສະແຫວງຫາປະເພດນີ້. ແລ້ວການສະແຫວງຫາທີ່ພຣະເຈົ້າບໍ່ເຫັນດີດ້ວຍຈະມີຄວາມໝາຍຫຍັງ?

ພາລະກິດທີ່ໂປໂລປະຕິບັດແມ່ນການສະແດງຕໍ່ໜ້າມະນຸດ, ແຕ່ຄວາມຮັກຂອງລາວທີ່ມີຕໍ່ພຣະເຈົ້າບໍລິສຸດຫຼາຍສໍ່າໃດ ແລະ ລາວຮັກພຣະເຈົ້າຫຼາຍສໍ່າໃດເລິກໆໃນຫົວໃຈຂອງລາວນັ້ນ, ສິ່ງເຫຼົ່ານີ້ເປັນສິ່ງທີ່ມະນຸດບໍ່ສາມາດເບິ່ງເຫັນໄດ້. ມະນຸດສາມາດເຫັນພຽງແຕ່ພາລະກິດທີ່ລາວປະຕິບັດ ເຊິ່ງມະນຸດຮູ້ວ່າລາວຖືກໃຊ້ໂດຍພຣະວິນຍານບໍລິສຸດຢ່າງແນ່ນອນ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງຄິດວ່າ ໂປໂລດີກວ່າເປໂຕ, ເຊິ່ງພາລະກິດຂອງລາວຍິ່ງໃຫຍ່ກວ່າ ກໍຍ້ອນວ່າ ລາວສາມາດຕອບສະໜອງຄຣິດຕະຈັກໄດ້. ສ່ວນເປໂຕແມ່ນພຽງແຕ່ສົນໃຈກັບປະສົບການສ່ວນຕົວຂອງລາວ ແລະ ໄດ້ຮັບຜູ້ຄົນຈຳນວນໜ້ອຍໃນທ່າມກາງພາລະກິດຊົ່ວຄາວຂອງລາວ. ມີຈົດໝາຍພຽງໜ້ອຍດຽວທີ່ເປັນທີ່ຮູ້ຈັກຈາກລາວ, ແຕ່ມີໃຜຮູ້ແດ່ວ່າ ຄວາມຮັກທີ່ລາວມີຕໍ່ພຣະເຈົ້ານັ້ນຍິ່ງໃຫຍ່ຫຼາຍສໍ່າໃດ ໃນສ່ວນເລິກພາຍໃນຫົວໃຈຂອງລາວ? ມື້ແລ້ວມື້ເລົ່າ ໂປໂລປະຕິບັດພາລະກິດເພື່ອພຣະເຈົ້າ ນັ້ນກໍຄື ຕາບໃດທີ່ມີພາລະກິດໃຫ້ປະຕິບັດລາວກໍປະຕິບັດ. ລາວຮູ້ສຶກວ່າ ດ້ວຍລັກສະນະນີ້ ລາວຈະສາມາດຮັບເອົາມົງກຸດ ແລະ ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້, ແຕ່ລາວບໍ່ຍອມສະແຫວງຫາຫົນທາງທີ່ຈະປ່ຽນແປງຕົນເອງຜ່ານທາງພາລະກິດຂອງລາວ. ແມ່ນຫຍັງກໍຕາມທີ່ຢູ່ໃນຊີວິດຂອງເປໂຕເຊິ່ງບໍ່ສອດຄ່ອງຕາມຄວາມປາຖະໜາຂອງພຣະເຈົ້າ

ແມ່ນຈະເຮັດໃຫ້ລາວຮູ້ສຶກບໍ່ສະບາຍໃຈ. ຖ້າມັນບໍ່ປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ, ລາວກໍຮູ້ສຶກສຳນຶກຜິດ ແລະ ຈະຊອກຫາຫົນທາງທີ່ເໝາະສົມທີ່ລາວສາມາດພະຍາຍາມເພື່ອເຮັດໃຫ້ພຣະເຈົ້າພໍໃຈໄດ້. ແມ່ນແຕ່ໃນດ້ານຊີວິດຂອງລາວຈະເລັກນ້ອຍທີ່ສຸດ ແລະ ບໍ່ມີຄວາມໝາຍຫຍັງ, ລາວກໍຍັງຮຽກຮ້ອງໃຫ້ຕົນເອງປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ. ລາວເຂັ້ມງວດຫຼາຍເມື່ອເວົ້າເຖິງອຸປະນິໄສເກົ່າຂອງລາວ, ເຄັ່ງຄັດໃນເງື່ອນໄຂທີ່ລາວມີຕໍ່ຕົນເອງເພື່ອພັດທະນາເຂົ້າສູ່ຄວາມຈິງໃຫ້ເລິກເຊິ່ງຫຼາຍຍິ່ງຂຶ້ນ. ໂປໂລສະແຫວງຫາພຽງແຕ່ຊື່ສຽງ ແລະ ສະຖານະແບບຜິວເຜີນເທົ່ານັ້ນ. ລາວສະແຫວງຫາເພື່ອໂອ້ອວດຕົນເອງຕໍ່ໜ້າມະນຸດ ແລະ ບໍ່ໄດ້ສະແຫວງຫາເພື່ອພັດທະນາການເຂົ້າສູ່ຊີວິດໃຫ້ເລິກເຊິ່ງຍິ່ງກວ່າເກົ່າ. ສິ່ງທີ່ລາວໃສ່ໃຈແມ່ນຄຳສັ່ງສອນ ບໍ່ແມ່ນຄວາມເປັນຈິງ. ບາງຄົນເວົ້າວ່າ "ໂປໂລປະຕິບັດພາລະກິດຫຼາຍຢ່າງສຳລັບພຣະເຈົ້າ, ເປັນຫຍັງພຣະເຈົ້າຈຶ່ງບໍ່ຈົດຈຳລາວ? ເປໂຕປະຕິບັດພາລະກິດພຽງແຕ່ໜ້ອຍດຽວສຳລັບພຣະເຈົ້າ ແລະ ບໍ່ໄດ້ປະກອບສ່ວນຫຍັງຫຼາຍໃນຄຣິສຕະຈັກ, ແລ້ວເປັນຫຍັງລາວຈຶ່ງຖືກເຮັດໃຫ້ສົມບູນ?" ເປໂຕຮັກພຣະເຈົ້າຈົນເຖິງຈຸດໃດໜຶ່ງເຊິ່ງເປັນຈຸດທີ່ພຣະເຈົ້າຮຽກຮ້ອງ; ມີແຕ່ຄົນປະເພດນີ້ເທົ່ານັ້ນຈຶ່ງມີຄຳພະຍານໄດ້. ແລ້ວໂປໂລເດ? ໂປໂລຮັກພຣະເຈົ້າຫຼາຍສໍ່າໃດ? ເຈົ້າຮູ້ບໍ? ພາລະກິດຂອງໂປໂລແມ່ນຖືກປະຕິບັດໂດຍເຫັນແກ່ຫຍັງ? ແລ້ວພາລະກິດຂອງເປໂຕແມ່ນຖືກປະຕິບັດໂດຍເຫັນແກ່ຫຍັງ? ເປໂຕບໍ່ໄດ້ປະຕິບັດພາລະກິດຫຼາຍຢ່າງ, ແຕ່ເຈົ້າຮູ້ບໍວ່າ ແມ່ນຫຍັງທີ່ຢູ່ໃນສ່ວນເລິກພາຍໃນຫົວໃຈຂອງລາວ? ພາລະກິດຂອງໂປໂລແມ່ນກ່ຽວກັບການຕອບສະໜອງຄຣິສຕະຈັກ ແລະ ການສະໜັບສະໜູນຄຣິສຕະຈັກ. ສິ່ງທີ່ເປໂຕຜະເຊີນແມ່ນການປ່ຽນແປງໃນຊີວິດ-ອຸປະນິໄສຂອງລາວ; ລາວຜະເຊີນກັບການຮັກພຣະເຈົ້າ. ຕອນນີ້ເຈົ້າຮູ້ເຖິງຄວາມແຕກຕ່າງລະຫວ່າງແກ່ນແທ້ຂອງພວກເຂົາ, ເຈົ້າສາມາດເຫັນໄດ້ວ່າ ໃນທີ່ສຸດແລ້ວແມ່ນໃຜທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ ແລະ ແມ່ນໃຜທີ່ບໍ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ. ຄົນໜຶ່ງແມ່ນຮັກພຣະເຈົ້າຢ່າງແທ້ຈິງ ແລະ ອີກຄົນໜຶ່ງບໍ່ໄດ້ຮັກພຣະເຈົ້າຢ່າງແທ້ຈິງ; ຄົນໜຶ່ງໄດ້ຮັບການປ່ຽນແປງໃນອຸປະນິໄສຂອງເຂົາ ແລະ ອີກຄົນໜຶ່ງແມ່ນບໍ່ໄດ້ຮັບ; ຄົນໜຶ່ງຮັບໃຊ້ຢ່າງຖ່ອມຕົນ ແລະ ບໍ່ມີໃຜສັງເກດເຫັນຢ່າງງ່າຍດາຍ ແລະ ອີກຄົນແມ່ນຖືກຄົນອື່ນນະມັດສະການ ແລະ ມີລັກສະນະທີ່ຍິ່ງໃຫຍ່; ຄົນໜຶ່ງສະແຫວງຫາຄວາມບໍລິສຸດ ແລະ ອີກຄົນໜຶ່ງບໍ່ໄດ້ສະແຫວງຫາ ແລະ ເຖິງແມ່ນວ່າ ເຂົາຈະບໍລິສຸດ, ເຂົາກໍບໍ່ໄດ້ມີຄວາມຮັກທີ່ບໍລິສຸດ; ຄົນໜຶ່ງມີຄວາມເປັນມະນຸດທີ່ແທ້ຈິງ ແລະ ອີກຄົນໜຶ່ງບໍ່ມີຄວາມເປັນມະນຸດ; ຄົນໜຶ່ງມີຄວາມຮູ້ສຶກເປັນສິ່ງທີ່ຖືກສ້າງຂອງພຣະເຈົ້າ ແລະ ອີກຄົນໜຶ່ງບໍ່ມີ. ສິ່ງດັ່ງກ່າວແມ່ນຄວາມແຕກຕ່າງລະຫວ່າງແກ່ນແທ້ຂອງໂປໂລ ແລະ ເປໂຕ. ເສັ້ນທາງທີ່ເປໂຕຍ່າງແມ່ນເສັ້ນທາງແຫ່ງຄວາມສຳເລັດ ເຊິ່ງຍັງເປັນເສັ້ນທາງແຫ່ງການບັນລຸການຟື້ນຄືນຂອງຄວາມເປັນມະນຸດທຳມະດາ ແລະ ການຟື້ນຟູຫນ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ. ເປໂຕເປັນຕົວແທນໃຫ້ກັບທຸກຄົນທີ່ປະສົບຜົນສຳເລັດ. ເສັ້ນທາງທີ່ໂປໂລຍ່າງແມ່ນເສັ້ນທາງແຫ່ງຄວາມລົ້ມເຫຼວ ແລະ ລາວເປັນຕົວແທນໃຫ້ກັບທຸກຄົນທີ່ພຽງແຕ່ອ່ອນນ້ອມ ແລະ ເສຍສະຫຼະຕົນເອງໃນລະດັບຜິວເຜີນ ແລະ ບໍ່ໄດ້ຮັກພຣະເຈົ້າຢ່າງແທ້ຈິງ. ໂປໂລເປັນຕົວແທນໃຫ້ກັບທຸກຄົນທີ່ບໍ່ມີຄວາມຈິງ. ໃນຄວາມເຊື່ອທີ່ລາວມີ

ໃນພຣະເຈົ້າ, ເປໂຕສະແຫວງຫາເພື່ອເຮັດໃຫ້ພຣະເຈົ້າພໍໃຈໃນທຸກສິ່ງ ແລະ ສະແຫວງຫາເພື່ອເຊື່ອຟັງທຸກສິ່ງທີ່ມາຈາກພຣະເຈົ້າ. ລາວສາມາດຮັບເອົາການຕີສອນ ແລະ ການພິພາກສາໂດຍບໍ່ຕໍ່ວ່າແມ່ນແຕ່ໜ້ອຍດຽວ ພ້ອມທັງການຫຼໍ່ຫຼອມ, ຄວາມລຳບາກຍາກແຄ້ນ ແລະ ການຂາດເຂີນໃນຊີວິດຂອງລາວອີກດ້ວຍ ເຊິ່ງບໍ່ມີຫຍັງທີ່ສາມາດປ່ຽນແປງຄວາມຮັກທີ່ລາວມີໃຫ້ກັບພຣະເຈົ້າໄດ້. ນີ້ບໍ່ແມ່ນຄວາມຮັກພຣະເຈົ້າຢ່າງສູງສຸດບໍ? ນີ້ບໍ່ແມ່ນການປະຕິບັດຕາມໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າບໍ? ບໍ່ວ່າຈະເປັນການຕີສອນ, ການພິພາກສາ ຫຼື ຄວາມລຳບາກຍາກແຄ້ນ, ເຈົ້າສາມາດບັນລຸຄວາມເຊື່ອຟັງຈົນຕາຍສະເໝີ ແລະ ນີ້ແມ່ນສິ່ງທີ່ສິ່ງຖືກສ້າງຂອງພຣະເຈົ້າຄວນບັນລຸໃຫ້ໄດ້, ນີ້ຄືຄວາມບໍລິສຸດແຫ່ງຄວາມຮັກສຳລັບພຣະເຈົ້າ. ຖ້າມະນຸດສາມາດບັນລຸຫຼາຍສໍ່ານີ້, ເຂົາກໍຈະເປັນສິ່ງຖືກສ້າງທີ່ມີຄຸນສົມບັດຂອງພຣະເຈົ້າ ແລະ ບໍ່ມີຫຍັງທີ່ປະຕິບັດຕາມຄວາມປາຖະໜາຂອງພຣະຜູ້ສ້າງໄດ້ດີກວ່ານີ້. ໃຫ້ຈິນຕະນາການເບິ່ງວ່າ ເຈົ້າສາມາດປະຕິບັດພາລະກິດເພື່ອພຣະເຈົ້າ ແຕ່ເຈົ້າບໍ່ເຊື່ອຟັງພຣະເຈົ້າ ແລະ ບໍ່ສາມາດຮັກພຣະເຈົ້າຢ່າງແທ້ຈິງໄດ້. ໃນລັກສະນະນີ້ບໍ່ພຽງແຕ່ເຈົ້າບໍ່ປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າເທົ່ານັ້ນ ແຕ່ເຈົ້າຍັງຈະຖືກພຣະເຈົ້າຕຳນິ ຍ້ອນເຈົ້າເປັນຄົນທີ່ບໍ່ມີຄວາມຈິງ, ຄົນທີ່ບໍ່ສາມາດເຊື່ອຟັງພຣະເຈົ້າໄດ້ ແລະ ຄົນທີ່ບໍ່ເຊື່ອຟັງພຣະເຈົ້າເລີຍ. ເຈົ້າພຽງແຕ່ສົນໃຈກັບການປະຕິບັດພາລະກິດເພື່ອພຣະເຈົ້າ ແລະ ບໍ່ສົນໃຈກັບການນຳຄວາມຈິງເຂົ້າສູ່ການປະຕິບັດ ຫຼື ການຮູ້ຈັກຕົນເອງ. ເຈົ້າບໍ່ເຂົ້າໃຈ ຫຼື ຮູ້ຈັກພຣະຜູ້ສ້າງ ແລະ ບໍ່ເຊື່ອຟັງ ຫຼື ຮັກພຣະຜູ້ສ້າງ. ເຈົ້າເປັນຄົນທີ່ບໍ່ເຊື່ອຟັງພຣະເຈົ້າມາຕັ້ງແຕ່ເກີດ, ແລ້ວດ້ວຍເຫດນັ້ນຜູ້ຄົນດັ່ງກ່າວຈຶ່ງບໍ່ເປັນທີ່ຮັກຂອງພຣະຜູ້ສ້າງ.

ບາງຄົນເວົ້າວ່າ "ໂປໂລປະຕິບັດພາລະກິດຈຳນວນຫຼວງຫຼາຍ ແລະ ລາວກໍແບກຮັບເອົາພາລະກິດສຳລັບຄຣິດຕະຈັກ ແລະ ປະກອບສ່ວນຢ່າງຫຼວງຫຼາຍໃນຄຣິສຕະຈັກເຫຼົ່ານັ້ນ. ຈົດໝາຍສິບສາມສະບັບຂອງໂປໂລຢືນຢັນເຖິງເວລາ 2.000 ປີຂອງຍຸກແຫ່ງພຣະຄຸນ ແລະ ເປັນພຽງອັນດັບທີສອງຮອງຈາກພຣະກິດຕິຄຸນທັງສີ່. ແມ່ນໃຜສາມາດປຽບທຽບກັບລາວໄດ້? ບໍ່ມີໃຜສາມາດຖອດຄວາມໝາຍຂອງພຣະນິມິດຂອງໂຢຮັນ, ໃນຂະນະທີ່ຈົດໝາຍຂອງໂປໂລສະໜອງຊີວິດ ແລະ ພາລະກິດທີ່ລາວປະຕິບັດແມ່ນເປັນປະໂຫຍດຕໍ່ຄຣິສຕະຈັກ. ແມ່ນໃຜແນ່ທີ່ສາມາດບັນລຸສິ່ງດັ່ງກ່າວນີ້ໄດ້? ແລ້ວແມ່ນຫຍັງຄືພາລະກິດທີ່ເປໂຕປະຕິບັດ?" ເມື່ອມະນຸດວັດແທກຄົນອື່ນ, ເຂົາກໍ່ເຮັດແບບນັ້ນໂດຍອີງຕາມການປະກອບສ່ວນຂອງພວກເຂົາ. ເມື່ອພຣະເຈົ້າວັດແທກມະນຸດ, ພຣະອົງກໍ່ເຮັດໂດຍອີງຕາມທຳມະຊາດຂອງເຂົາ. ທ່າມກາງຄົນທີ່ສະແຫວງຫາຊີວິດ, ໂປໂລເປັນຄົນທີ່ບໍ່ຮູ້ຈັກທາດແທ້ຂອງຕົນເອງ. ລາວບໍ່ມີທາງຖ່ອມຕົນ ຫຼື ເຊື່ອຟັງ ຫຼື ລາວບໍ່ຮູ້ຈັກແກ່ນແທ້ຂອງລາວເອງ ເຊິ່ງກົງກັນຂ້າມກັບພຣະເຈົ້າ. ແລ້ວດ້ວຍເຫດນັ້ນ ລາວຈຶ່ງເປັນຄົນທີ່ບໍ່ໄດ້ຜ່ານປະສົບການຢ່າງລະອຽດ ແລະ ເປັນຄົນທີ່ບໍ່ໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ. ເປໂຕແມ່ນແຕກຕ່າງ. ລາວຮູ້ຈັກຄວາມບໍ່ສົມບູນ ແລະ ຄວາມບົກຜ່ອງຂອງຕົນເອງ ແລະ ອຸປະນິໄສທີ່ເສື່ອມຊາມຂອງຕົງເອງໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ລາວຈຶ່ງມີເສັ້ນທາງແຫ່ງການປະຕິບັດເພື່ອປ່ຽນແປງອຸປະນິໄສຂອງລາວ; ລາວບໍ່ແມ່ນຄົນທີ່ມີພຽງແຕ່ທິດສະດີ ແຕ່ບໍ່ມີຄວາມຈິງ. ຄົນທີ່ປ່ຽນແປງແມ່ນຄົນໃໝ່ທີ່ໄດ້ຖືກຊ່ວຍໃຫ້

ລອດພົ້ນ, ພວກເຂົາເປັນຄົນທີ່ມີຄຸນສົມບັດໃນການສະແຫວງຫາຄວາມຈິງ. ຄົນທີ່ບໍ່ປ່ຽນແປງແມ່ນເປັນສ່ວນໜຶ່ງຂອງຄົນທີ່ຫຼົງາສະໄໝໂດຍທຳມະຊາດ; ພວກເຂົາເປັນຄົນທີ່ບໍ່ໄດ້ຖືກຊ່ວຍໃຫ້ລອດພົ້ນ ນັ້ນກໍຄື ຄົນທີ່ຖືກພຣະເຈົ້າກຽດຊັງ ແລະ ປະຕິເສດ. ພຣະເຈົ້າຈະບໍ່ຈົດຈຳພວກເຂົາ ບໍ່ວ່າພາລະກິດຂອງພວກເຂົາຈະຍິ່ງໃຫຍ່ສໍ່າໃດກໍຕາມ. ເມື່ອເຈົ້າປຽບທຽບສິ່ງນີ້ກັບການສະແຫວງຫາຂອງເຈົ້າເອງ, ໃນທີ່ສຸດແລ້ວ ບໍ່ວ່າເຈົ້າຈະເປັນຄົນປະເພດດຽວກັນກັບເປໂຕ ຫຼື ໂປໂລ ກໍຄວນຊັດເຈນໃນຕົວເອງ. ຖ້າຍັງບໍ່ມີຄວາມຈິງໃນສິ່ງທີ່ເຈົ້າສະແຫວງຫາ ແລະ ເຖິງແມ່ນໃນປັດຈຸບັນ ເຈົ້າຍັງອວດດີ ແລະ ຈອງຫອງຄືກັບໂປໂລ ແລະ ເວົ້າໄປມື້ວ ແລະ ໂອ້ອວດຕົນເອງຄືກັບລາວ, ແລ້ວເຈົ້າກໍເປັນຄົນເສື່ອມຊາມທີ່ລົ້ມເຫຼວໂດຍບໍ່ຕ້ອງສົງໄສເລີຍ. ຖ້າເຈົ້າສະແຫວງຫາສິ່ງດຽວກັນກັບເປໂຕ, ຖ້າເຈົ້າສະແຫວງຫາການປະຕິບັດ ແລະ ການປ່ຽນແປງຢ່າງແທ້ຈິງ ແລະ ບໍ່ອວດດີ ຫຼື ຈິງໃຈ, ແຕ່ສະແຫວງຫາເພື່ອປະຕິບັດໜ້າທີ່ຂອງເຈົ້າ, ແລ້ວເຈົ້າກໍເປັນສິ່ງຖືກສ້າງຂອງພຣະເຈົ້າທີ່ສາມາດບັນລຸໄຊຊະນະໄດ້. ໂປໂລບໍ່ຮູ້ຈັກແກ່ນແທ້ ຫຼື ຄວາມເສື່ອມຊາມຂອງຕົວເອງ, ແຮງໄກທີ່ລາວຈະຮູ້ຈັກຄວາມບໍ່ເຊື່ອຟັງຂອງຕົນເອງ. ລາວບໍ່ເຄີຍກ່າວເຖິງການຂັດຂືນຄຳສັ່ງຂອງພຣະຄຣິດຢ່າງຊົ່ວຊ້າຂອງລາວ ຫຼື ລາວບໍ່ເຄີຍຮູ້ສຶກເສຍໃຈຫຍັງເລີຍ. ລາວພຽງແຕ່ອະທິບາຍແບບສັ້ນໆ ແລະ ສ່ວນເລິກໃນຫົວໃຈຂອງລາວ, ລາວບໍ່ຍອມອ່ອນນ້ອມຕໍ່ພຣະເຈົ້າຢ່າງສົມບູນເລີຍ. ເຖິງແມ່ນວ່າ ລາວລົ້ມເຫຼວບົນເສັ້ນທາງໄປດາມັສກັດ, ລາວກໍບໍ່ໄດ້ເບິ່ງລົງເລິກພາຍໃນຕົວລາວເອງ. ລາວພໍໃຈທີ່ຈະສືບຕໍ່ປະຕິບັດພາລະກິດເທົ່ານັ້ນ ແລະ ລາວບໍ່ພິຈາລະນາວ່າ ການຮູ້ຈັກຕົນເອງ ແລະ ການປ່ຽນແປງອຸປະນິໄສເກົ່າຂອງລາວເປັນບັນຫາທີ່ສຳຄັນທີ່ສຸດ. ລາວພໍໃຈກັບການເວົ້າຄວາມຈິງເທົ່ານັ້ນ ໂດຍຕອບສະໜອງໃຫ້ກັບຄົນອື່ນເພື່ອເປັນການບັນເທົາຈິດໃຈຂອງລາວເອງ ແລະ ໂດຍການບໍ່ຂົ່ມເຫັງສາວົກຂອງພຣະເຢຊູເພື່ອເຮັດໃຫ້ຕົນເອງສະບາຍໃຈ ແລະ ເປັນການຍົກໂທດໃຫ້ກັບຕົນເອງສຳລັບຄວາມຜິດບາບໃນອະດີດ. ເປົ້າໝາຍທີ່ລາວສະແຫວງຫາບໍ່ມີຫຍັງເລີຍ ນອກຈາກມົງກຸດໃນອະນາຄົດ ແລະ ພາລະກິດຊົ່ວຄາວ, ເປົ້າໝາຍທີ່ລາວສະແຫວງຫາຄືຄວາມເມດຕາຢ່າງໃຫຍ່ຫຼວງ. ລາວບໍ່ໄດ້ສະແຫວງຫາຄວາມຈິງທີ່ເໝາະສົມ ຫຼື ລາວບໍ່ໄດ້ສະແຫວງຫາເພື່ອພັດທະນາຢ່າງເລິກເຊິ່ງເຂົ້າໃນຄວາມຈິງທີ່ລາວບໍ່ເຂົ້າໃຈກ່ອນໜ້ານັ້ນ. ສະນັ້ນ ຄວາມຮູ້ຂອງລາວທີ່ມີກ່ຽວກັບຕົນເອງ ຈຶ່ງສາມາດເວົ້າໄດ້ວ່າເປັນຄວາມຮູ້ທີ່ຜິດ ແລະ ລາວບໍ່ຍອມຮັບເອົາການຕີສອນ ຫຼື ການພິພາກສາ. ການທີ່ລາວສາມາດປະຕິບັດພາລະກິດ ບໍ່ໄດ້ໝາຍຄວາມວ່າລາວມີຄວາມຮູ້ກ່ຽວກັບທຳມະຊາດ ຫຼື ແກ່ນແທ້ຂອງຕົນເອງ; ຈຸດສົນໃຈຂອງລາວແມ່ນຢູ່ທີ່ການປະຕິບັດແຕ່ພາຍນອກເທົ່ານັ້ນ. ຍິ່ງໄປກວ່ານັ້ນ ສິ່ງທີ່ລາວພະຍາຍາມຄົ້ນຫາບໍ່ແມ່ນການປ່ຽນແປງ ແຕ່ເປັນຄວາມຮູ້. ພາລະກິດຂອງລາວເປັນຜົນມາຈາກການປາກົດຕົວຂອງພຣະເຢຊູໃນຫົນທາງສູ່ດາມັສກັດໂດຍສິ້ນເຊີງ. ມັນບໍ່ແມ່ນສິ່ງທີ່ລາວຕັດສິນໃຈປະຕິບັດຕັ້ງແຕ່ຕົ້ນ ຫຼື ມັນບໍ່ແມ່ນພາລະກິດທີ່ເກີດຂຶ້ນຫຼັງຈາກທີ່ລາວໄດ້ຍອມຮັບການລິຮານອຸປະນິໄສເກົ່າຂອງລາວ. ບໍ່ວ່າລາວປະຕິບັດພາລະກິດແນວໃດກໍຕາມ, ອຸປະນິໄສເກົ່າຂອງລາວກໍບໍ່ໄດ້ປ່ຽນແປງ ແລະ ດ້ວຍເຫດນັ້ນພາລະກິດຂອງລາວຈຶ່ງບໍ່ໄດ້ຊົດເຊີຍຄວາມບາບໃນອະດີດຂອງລາວ, ພຽງແຕ່ເຮັດບົດບາດໃດໜຶ່ງ

ທ່າມກາງຄຣິສຕະຈັກໃນເວລານັ້ນເທົ່ານັ້ນ. ສຳລັບຄົນປະເພດນີ້ ຜູ້ທີ່ບໍ່ໄດ້ປ່ຽນແປງອຸປະນິໄສເກົ່າ ນັ້ນໝາຍຄວາມວ່າ ຄົນທີ່ບໍ່ຍອມຮັບເອົາຄວາມລອດພົ້ນ ແລະ ປາສະຈາກຄວາມຈິງ, ລາວແມ່ນບໍ່ສາມາດກາຍເປັນໜຶ່ງໃນກຸ່ມຄົນທີ່ພຣະເຢຊູເຈົ້າຍອມຮັບເອົາຢ່າງແນ່ນອນ. ລາວບໍ່ແມ່ນຄົນທີ່ເຕັມໄປດ້ວຍຄວາມຮັກ ແລະ ຄວາມເຄົາລົບນັບຖືສຳລັບພຣະເຢຊູຄຣິດ ຫຼື ລາວບໍ່ແມ່ນຄົນທີ່ເກັ່ງໃນການສະແຫວງຫາຄວາມຈິງ ແຮງໄກທີ່ລາວຈະເປັນຄົນທີ່ສະແຫວງຫາຄວາມເລິກລັບຂອງການບັງເກີດເປັນມະນຸດ. ລາວເປັນພຽງຄົນທີ່ເກັ່ງໃນການອ້າງເຫດຜົນແບບຜິດໆເທົ່ານັ້ນ ແລະ ຄົນທີ່ບໍ່ຍອມຢູ່ພາຍໃຕ້ບຸກຄົນທີ່ສູງສົ່ງກວ່າລາວ ຫຼື ພາຍໃຕ້ຄົນທີ່ມີຄວາມຈິງ. ລາວອິດສາຄົນອື່ນ ຫຼື ຄວາມຈິງທີ່ຢູ່ກົງກັນຂ້າມກັບລາວ ຫຼື ເປັນສັດຕູກັບລາວ ໂດຍເພິ່ງພໍໃຈຄົນທີ່ມີພອນສະຫວັນ ຜູ້ເຊິ່ງມີຮູບລັກສະນະທີ່ຍິ່ງໃຫຍ່ ຫຼື ມີຄວາມຮູ້ທີ່ເລິກເຊິ່ງ. ລາວບໍ່ມັກພົວພັນກັບຄົນທຸກຍາກທີ່ສະແຫວງຫາຫົນທາງທີ່ຖືກຕ້ອງ ແລະ ບໍ່ສົນໃຈຫຍັງເລີຍນອກຈາກຄວາມຈິງ ແລະ ກົງກັນຂ້າມ ລາວມີຄວາມສຳພັນກັບບຸກຄົນອາວຸໂສຈາກອົງກອນສາສະໜາທີ່ເວົ້າແຕ່ທິດສະດີເທົ່ານັ້ນ ແລະ ມີຄວາມຮູ້ທີ່ອຸດົມສົມບູນ. ລາວບໍ່ມີຄວາມຮັກໃນພາລະກິດໃໝ່ຂອງພຣະວິນຍານບໍລິສຸດ ແລະ ບໍ່ສົນໃຈຕໍ່ການເຄື່ອນໄຫວໃນພາລະກິດໃໝ່ຂອງພຣະວິນຍານບໍລິສຸດ. ກົງກັນຂ້າມ, ລາວເຂົ້າຂ້າງລະບຽບ ແລະ ທິດສະດີເຫຼົ່ານັ້ນທີ່ສູງສົ່ງກວ່າຄວາມຈິງທົ່ວໄປ. ໃນທາດແທ້ໂດຍກຳເນີດຂອງລາວ ແລະ ສິ່ງທີ່ລາວສະແຫວງຫາທັງໝົດນັ້ນ, ລາວບໍ່ສົມຄວນຖືກເອີ້ນວ່າ ເປັນຄົນຄຣິສຕຽນ ຜູ້ທີ່ສະແຫວງຫາຄວາມຈິງ ແຮງໄກທີ່ຈະເປັນຜູ້ຮັບໃຊ້ທີ່ຊື່ສັດໃນຄົວເຮືອນຂອງພຣະເຈົ້າ ເພາະຍ້ອນຄວາມໜ້າຊື່ໃຈຄົດຂອງລາວແມ່ນມີຫຼາຍເກີນໄປ ແລະ ຄວາມບໍ່ເຊື່ອຟັງຂອງລາວກໍມີຫຼາຍເກີນໄປ. ເຖິງແມ່ນລາວເປັນທີ່ຮູ້ຈັກໃນຖານະຜູ້ຮັບໃຊ້ຂອງພຣະເຢຊູເຈົ້າ, ລາວກໍບໍ່ເໝາະສົມທີ່ຈະເຂົ້າສູ່ປະຕູແຫ່ງອານາຈັກສະຫວັນ ຍ້ອນການກະທຳຂອງລາວຕັ້ງແຕ່ຕົ້ນຈົນຈົບນັ້ນແມ່ນບໍ່ສາມາດເອີ້ນວ່າ ຄວາມຊອບທຳໄດ້. ພຽງແຕ່ເຫັນວ່າລາວເປັນຄົນທີ່ໜ້າຊື່ໃຈຄົດ ແລະ ເຮັດສິ່ງບໍ່ຊອບທຳ ແຕ່ກໍຍັງປະຕິບັດພາລະກິດເພື່ອພຣະຄຣິດ. ເຖິງແມ່ນລາວບໍ່ສາມາດເອີ້ນວ່າຄົນຊົ່ວຮ້າຍໄດ້, ລາວກໍສົມຄວນທີ່ຈະຖືກເອີ້ນວ່າ ມະນຸດທີ່ເຮັດສິ່ງບໍ່ຊອບທຳ. ລາວປະຕິບັດພາລະກິດຫຼາຍຢ່າງ ແຕ່ລາວຕ້ອງບໍ່ຖືກຕັດສິນອີງຕາມຈຳນວນພາລະກິດທີ່ລາວປະຕິບັດ ແຕ່ຕ້ອງອີງຕາມຄຸນນະພາບ ແລະ ແກ່ນແທ້ຂອງພາລະກິດເທົ່ານັ້ນ. ດ້ວຍວິທີນີ້ເທົ່ານັ້ນ ມັນຈຶ່ງຈະສາມາດເຂົ້າເຖິງຕົ້ນເຫດຂອງບັນຫາ. ລາວເຊື່ອຢູ່ສະເໝີວ່າ "ຂ້ານ້ອຍສາມາດປະຕິບັດພາລະກິດ, ຂ້ານ້ອຍດີກວ່າຄົນສ່ວນໃຫຍ່; ຂ້ານ້ອຍຄຳນຶງເຖິງພາລະຂອງພຣະຜູ້ເປັນເຈົ້າ ບໍ່ຄືກັບຄົນອື່ນ ແລະ ບໍ່ມີໃຜກັບໃຈໄດ້ຢ່າງເລິກເຊິ່ງກວ່າຂ້ານ້ອຍອີກແລ້ວ, ຍ້ອນແສງສະຫວ່າງທີ່ຍິ່ງໃຫຍ່ໄດ້ສ່ອງແສງລົງມາໃສ່ຕົວຂ້ານ້ອຍ ແລະ ຂ້ານ້ອຍໄດ້ເຫັນແສງສະຫວ່າງທີ່ຍິ່ງໃຫຍ່ນັ້ນ ແລະ ດ້ວຍເຫດນັ້ນ ການກັບໃຈຂອງຂ້ານ້ອຍຈຶ່ງເລິກເຊິ່ງກວ່າຄົນອື່ນໆ". ໃນເວລານັ້ນ, ນີ້ແມ່ນສິ່ງທີ່ລາວຄິດຢູ່ພາຍໃນຫົວໃຈຂອງລາວ. ໃນເວລາສຸດທ້າຍຂອງພາລະກິດຂອງລາວ, ໂປໂລກ່າວວ່າ "ຂ້ານ້ອຍໄດ້ຕໍ່ສູ້, ຂ້ານ້ອຍໄດ້ສຳເລັດເສັ້ນທາງຂອງຂ້ານ້ອຍແລ້ວ ແລະ ມີມົງກຸດແຫ່ງຄວາມຊອບທຳລໍຖ້າຢູ່ສຳລັບຂ້ານ້ອຍ". ການຕໍ່ສູ້, ພາລະກິດ ແລະ ເສັ້ນທາງຂອງລາວແມ່ນເຫັນແກ່ມົງກຸດແຫ່ງຄວາມຊອບທຳໂດຍສິ້ນເຊີງ ແລະ ລາວບໍ່

ໄດ້ກ້າວໄປຂ້າງໜ້າຢ່າງຫ້າວຫັນ. ເຖິງແມ່ນວ່າ ລາວບໍ່ໄດ້ປະຕິບັດພາລະກິດຂອງລາວພໍເປັນພິທີ, ມັນສາມາດເວົ້າໄດ້ວ່າ ພາລະກິດຂອງລາວແມ່ນຖືກປະຕິບັດເພື່ອຊົດເຊີຍຄວາມຜິດພາດຂອງລາວ ແລະ ທົດແທນການສຳນຶກຜິດຂອງລາວເທົ່ານັ້ນ. ລາວພຽງແຕ່ຫວັງທີ່ຈະເຮັດໃຫ້ພາລະກິດຂອງລາວສຳເລັດ, ເຮັດໃຫ້ເສັ້ນທາງຂອງລາວສຳເລັດ ແລະ ສຳເລັດກັບການຕໍ່ສູ້ຂອງລາວໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້ ເພື່ອວ່າລາວຈະໄດ້ຮັບເອົາມົງກຸດແຫ່ງຄວາມຊອບທຳໄວຂຶ້ນ ເຊິ່ງເປັນສິ່ງທີ່ລາວປາຖະໜາມາແຕ່ດົນນານແລ້ວ. ສິ່ງທີ່ລາວປາຖະໜາບໍ່ແມ່ນການພົບກັບພຣະເຢຊູເຈົ້າດ້ວຍປະສົບການຂອງລາວ ແລະ ຄວາມຮູ້ທີ່ແທ້ຈິງ, ແຕ່ເພື່ອເຮັດໃຫ້ພາລະກິດຂອງລາວສຳເລັດໄວເທົ່າທີ່ຈະໄວໄດ້ ເພື່ອວ່າລາວຈະໄດ້ຮັບເອົາລາງວັນຈາກພາລະກິດຂອງລາວ ໃນເວລາທີ່ລາວພົບກັບພຣະເຢຊູເຈົ້າ. ລາວໃຊ້ພາລະກິດຂອງລາວເພື່ອປອບໃຈລາວເອງ ແລະ ເພື່ອແລກປ່ຽນກັບມົງກຸດໃນອະນາຄົດ. ສິ່ງທີ່ລາວສະແຫວງຫາບໍ່ແມ່ນຄວາມຈິງ ຫຼື ພຣະເຈົ້າ, ແຕ່ເປັນມົງກຸດເທົ່ານັ້ນ. ການສະແຫວງຫາແບບນີ້ຈະເປັນໄປຕາມມາດຕະຖານໄດ້ແນວໃດ? ແຮງຜັກດັນຂອງລາວ, ພາລະກິດຂອງລາວ, ລາຄາທີ່ລາວຈ່າຍ ແລະ ຄວາມພະຍາຍາມທັງໝົດຂອງລາວ, ຄວາມເພີ້ຝັນຢ່າງງົດງາມຂອງລາວແຜ່ຄຸມສິ່ງເຫຼົ່ານັ້ນທັງໝົດ ແລະ ລາວກໍປະຕິບັດພາລະກິດຕາມຄວາມປາຖະໜາຂອງລາວເອງເທົ່ານັ້ນ. ໃນພາລະກິດທັງໝົດຂອງລາວ, ບໍ່ມີຄວາມເຕັມໃຈ ແລະ ຄວາມພະຍາຍາມແມ່ນແຕ່ໜ້ອຍດຽວໃນການກະທຳຂອງລາວ; ລາວພຽງແຕ່ພົວພັນກັບການຄ້າຂາຍເທົ່ານັ້ນ. ຄວາມພະຍາຍາມຂອງລາວບໍ່ແມ່ນເພື່ອປະຕິບັດໜ້າທີ່ຂອງລາວຢ່າງເຕັມໃຈ, ແຕ່ເພື່ອບັນລຸຈຸດປະສົງຂອງການຄ້າຂາຍດ້ວຍຄວາມເຕັມໃຈ. ແລ້ວຄວາມພະຍາຍາມດັ່ງກ່າວມີຄ່າຫຍັງບໍ? ແມ່ນໃຜທີ່ຈະຊົມເຊີຍຄວາມພະຍາຍາມທີ່ບໍ່ບໍລິສຸດຂອງລາວ? ແມ່ນໃຜທີ່ຈະສົນໃຈຄວາມພະຍາຍາມດັ່ງກ່າວ? ພາລະກິດຂອງລາວເຕັມໄປດ້ວຍຄວາມຝັນໃນອະນາຄົດ, ເຕັມໄປດ້ວຍແຜນການທີ່ງົດງາມ ແລະ ບໍ່ມີເສັ້ນທາງຫຍັງເລີຍທີ່ຈະປ່ຽນແປງອຸປະນິໄສຂອງມະນຸດໄດ້. ຄວາມເມດຕາກະລຸນາຢ່າງຫຼວງຫຼາຍຂອງລາວເປັນພຽງການທຳທ່າ; ພາລະກິດຂອງລາວບໍ່ໄດ້ສະໜອງຊີວິດ, ແຕ່ເປັນສະແດງຄວາມສຸພາບ ແລະ ກຽດຕິຍົດແບບຈອມປອມ; ມັນເປັນການກະທຳເພື່ອການຄ້າຂາຍ. ພາລະກິດແບບນີ້ຈະສາມາດນຳພາມະນຸດໄປສູ່ເສັ້ນທາງແຫ່ງການຟື້ນຟູໜ້າທີ່ດັ້ງເດີມຂອງເຂົາໄດ້ແນວໃດ?

ສິ່ງທີ່ເປໂຕສະແຫວງຫາແມ່ນສອດຄ່ອງກັບຫົວໃຈຂອງພຣະເຈົ້າເທົ່ານັ້ນ. ລາວສະແຫວງຫາເພື່ອປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ ແລະ ໂດຍບໍ່ຄຳນຶງເຖິງການທົນທຸກ ແລະ ຄວາມລຳບາກຍາກແຄ້ນ, ລາວຍັງເຕັມໃຈທີ່ຈະປະຕິບັດຄວາມປາຖະໜາຂອງພຣະເຈົ້າ. ຜູ້ເຊື່ອໃນພຣະເຈົ້າບໍ່ມີການສະແຫວງຫາທີ່ຍິ່ງໃຫຍ່ກວ່ານີ້ອີກແລ້ວ. ສິ່ງທີ່ໂປໂລສະແຫວງຫາແມ່ນຖືກເຮັດໃຫ້ເປິເປື້ອນດ້ວຍເນື້ອໜັງຂອງລາວເອງ, ດ້ວຍແນວຄິດຂອງລາວເອງ ແລະ ດ້ວຍແຜນການ ແລະ ໂຄງການຂອງລາວເອງ. ລາວບໍ່ສາມາດເປັນສິ່ງທີ່ຖືກສ້າງທີ່ມີຄຸນສົມບັດຂອງພຣະເຈົ້າໄດ້ ແລະ ບໍ່ແມ່ນຄົນທີ່ສະແຫວງຫາເພື່ອປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ. ເປໂຕສະແຫວງຫາເພື່ອຍອມຢູ່ພາຍໃຕ້ການປັ້ນແຕ່ງຂອງພຣະເຈົ້າ ແລະ ເຖິງແມ່ນວ່າ ພາລະກິດທີ່ລາວປະຕິບັດນັ້ນບໍ່ໄດ້ຍິ່ງໃຫຍ່, ແຮງຜັກ

ດັ່ງທີ່ຢູ່ເບື້ອງຫຼັງການສະແຫວງຫາຂອງລາວ ແລະ ເສັ້ນທາງທີ່ລາວຍ່າງແມ່ນຖືກຕ້ອງ; ເຖິງແມ່ນວ່າລາວບໍ່ສາມາດເຮັດໃຫ້ຫຼາຍຄົນຍອມຮັບລາວ, ລາວສາມາດສະແຫວງຫາຫົນທາງແຫ່ງຄວາມຈິງໄດ້. ຍ້ອນເຫດນີ້ ຈຶ່ງສາມາດເວົ້າໄດ້ວ່າ ລາວເປັນສິ່ງທີ່ຖືກສ້າງທີ່ມີຄຸນສົມບັດຂອງພຣະເຈົ້າ. ໃນປັດຈຸບັນ, ເຖິງແມ່ນວ່າ ເຈົ້າບໍ່ແມ່ນຜູ້ປະຕິບັດພາລະກິດ, ເຈົ້າກໍ່ຄວນສາມາດປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ ແລະ ສະແຫວງຫາເພື່ອຍອມຢູ່ພາຍໃຕ້ການປັ້ນແຕ່ງທຸກຢ່າງຂອງພຣະເຈົ້າ. ເຈົ້າຄວນສາມາດເຊື່ອຟັງທຸກສິ່ງທີ່ພຣະເຈົ້າກ່າວ ແລະ ຜະເຊີນກັບຄວາມລຳບາກຍາກແຄ້ນ ແລະ ການຫຼໍ່ຫຼອມໃນທຸກຮູບແບບ ແລະ ເຖິງແມ່ນເຈົ້າອ່ອນແອ, ໃນຫົວໃຈຂອງເຈົ້າ ເຈົ້າກໍຕ້ອງຮັກພຣະເຈົ້າ. ຄົນທີ່ຮັບຜິດຊອບຊີວິດຂອງພວກເຂົາເອງແມ່ນຄົນທີ່ເຕັມໃຈປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ ແລະ ມຸມມອງຂອງຄົນປະເພດດັ່ງກ່າວຕໍ່ການສະແຫວງຫາກໍ່ເປັນມຸມມອງທີ່ຖືກຕ້ອງ. ຄົນເຫຼົ່ານີ້ແມ່ນຄົນທີ່ພຣະເຈົ້າຕ້ອງການ. ຖ້າເຈົ້າປະຕິບັດພາລະກິດຫຼາຍຢ່າງ ແລະ ຄົນອື່ນຮັບເອົາຄຳສັ່ງສອນຂອງເຈົ້າ, ແຕ່ເຈົ້າເອງບໍ່ໄດ້ປ່ຽນແປງ ແລະ ບໍ່ໄດ້ເປັນພະຍານຫຍັງເລີຍ ຫຼື ບໍ່ມີປະສົບການທີ່ແທ້ຈິງເລີຍ, ຈົນເຖິງກັບວ່າ ໃນຕອນສຸດທ້າຍຂອງຊີວິດເຈົ້າ ສິ່ງທີ່ເຈົ້າໄດ້ເຮັດນັ້ນກໍຍັງບໍ່ມີຫຍັງທີ່ເປັນພະຍານໄດ້, ແລ້ວເຈົ້າເປັນຄົນທີ່ໄດ້ປ່ຽນແປງແລ້ວບໍ? ເຈົ້າເປັນຄົນທີ່ສະແຫວງຫາຄວາມຈິງບໍ? ໃນເວລານັ້ນພຣະວິນຍານບໍລິສຸດໃຊ້ເຈົ້າ ແຕ່ເມື່ອພຣະອົງໃຊ້ເຈົ້າ, ພຣະອົງໃຊ້ສ່ວນຂອງເຈົ້າທີ່ສາມາດຖືກໃຊ້ເພື່ອປະຕິບັດພາລະກິດໄດ້ ແລະ ພຣະອົງບໍ່ໄດ້ໃຊ້ສ່ວນຂອງເຈົ້າທີ່ບໍ່ສາມາດຖືກໃຊ້ເພື່ອປະຕິບັດພາລະກິດ. ຖ້າເຈົ້າສະແຫວງຫາເພື່ອປ່ຽນແປງ, ແລ້ວເຈົ້າກໍຈະຖືກເຮັດໃຫ້ສົມບູນເທື່ອລະໜ້ອຍໃນທ່າມກາງຂະບວນການຮັບໃຊ້. ເຖິງຢ່າງໃດກໍຕາມ ພຣະວິນຍານບໍລິສຸດຈະບໍ່ຮັບຜິດຊອບ ບໍ່ວ່າເຈົ້າຈະຖືກຮັບເອົາ ຫຼື ບໍ່ ແມ່ນຂຶ້ນຢູ່ກັບລັກສະນະຂອງການສະແຫວງຫາຂອງເຈົ້າ. ຖ້າບໍ່ມີການປ່ຽນແປງໃນອຸປະນິໄສສ່ວນຕົວຂອງເຈົ້າ, ແລ້ວນັ້ນກໍຍ້ອນວ່າ ມຸມມອງຂອງເຈົ້າໃນການສະແຫວງຫາແມ່ນບໍ່ຖືກຕ້ອງ. ຖ້າເຈົ້າບໍ່ໄດ້ຮັບລາງວັນ, ນັ້ນກໍແມ່ນບັນຫາຂອງເຈົ້າເອງ ແລະ ເປັນຍ້ອນເຈົ້າເອງທີ່ບໍ່ໄດ້ນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ບໍ່ສາມາດປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າໄດ້. ສະນັ້ນບໍ່ມີຫຍັງທີ່ສຳຄັນໄປກວ່າປະສົບການສ່ວນຕົວຂອງເຈົ້າ ແລະ ບໍ່ມີຫຍັງທີ່ສຳຄັນຫຼາຍກວ່າທາງເຂົ້າສ່ວນຕົວຂອງເຈົ້າ! ບາງຄົນອາດຈະລົງເອີຍດ້ວຍຄຳເວົ້າທີ່ວ່າ "ຂ້ານ້ອຍໄດ້ປະຕິບັດພາລະກິດຫຼາຍຢ່າງເພື່ອພຣະອົງ ແລະ ເຖິງແມ່ນຂ້ານ້ອຍອາດບໍ່ມີຜົນສຳເລັດທີ່ມີຊື່ສຽງ, ຂ້ານ້ອຍກໍຍັງດຸໝັ່ນໃນຄວາມພະຍາຍາມຂອງຂ້ານ້ອຍ. ພຣະອົງໃຫ້ຂ້ານ້ອຍເຂົ້າໄປໃນສະຫວັນເພື່ອກິນໝາກໄມ້ແຫ່ງຊີວິດໄດ້ບໍ?" ເຈົ້າຕ້ອງຮູ້ຈັກວ່າ ເຮົາປາຖະໜາຄົນປະເພດໃດ; ຄົນທີ່ບໍ່ບໍລິສຸດບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໃນອານາຈັກ, ຄົນທີ່ບໍ່ບໍລິສຸດບໍ່ໄດ້ຮັບອະນຸຍາດໃຫ້ເຮັດພື້ນດິນທີ່ສັກສິດຂອງເຮົາເປິເປື້ອນ. ເຖິງແມ່ນວ່າ ເຈົ້າອາດຈະປະຕິບັດພາລະກິດຫຼາຍຢ່າງ ແລະ ໄດ້ປະຕິບັດພາລະກິດຫຼາຍປີ, ໃນທີ່ສຸດແລ້ວ ຖ້າເຈົ້າຍັງເປິເປື້ອນຢ່າງໜ້າລັງກຽດ, ແລ້ວມັນກໍ່ຈະເຫຼືອທົນຕໍ່ກົດເກນແຫ່ງສະຫວັນທີ່ຈະປ່ອຍໃຫ້ເຈົ້າເຂົ້າສູ່ອານາຈັກຂອງເຮົາ! ຕັ້ງແຕ່ປະຖົມມະການຂອງໂລກຈົນເຖິງປັດຈຸບັນ, ເຮົາບໍ່ເຄີຍເຮັດໃຫ້ຄົນທີ່ປະຈົບປະແຈງເຮົາເຂົ້າສູ່ອານາຈັກຂອງເຮົາຢ່າງງ່າຍດາຍຈັກເທື່ອ. ນີ້ຄືກົດເກນແຫ່ງສະຫວັນ ແລະ ບໍ່ມີໃຜສາມາດທຳລາຍ

ມັນໄດ້! ເຈົ້າຕ້ອງສະແຫວງຫາຊີວິດ. ໃນປັດຈຸບັນ, ຄົນທີ່ຈະຖືກເຮັດໃຫ້ສົມບູນກໍເປັນຄົນປະເພດດຽວກັນກັບເປໂຕ: ພວກເຂົາເປັນຄົນທີ່ສະແຫວງຫາການປ່ຽນແປງໃນອຸປະນິໄສຂອງພວກເຂົາ ແລະ ຄົນທີ່ເຕັມໃຈຈະເປັນພະຍານໃຫ້ກັບພຣະເຈົ້າ ແລະ ປະຕິບັດໜ້າທີ່ໃນຖານະເປັນສິ່ງທີ່ຖືກສ້າງຂອງພຣະເຈົ້າ. ມີພຽງແຕ່ຄົນແບບນີ້ເທົ່ານັ້ນທີ່ຈະຖືກເຮັດໃຫ້ສົມບູນ. ຖ້າເຈົ້າພຽງແຕ່ຄົ້ນຫາລາງວັນ ແລະ ບໍ່ສະແຫວງຫາເພື່ອປ່ຽນແປງຊີວິດ-ອຸປະນິໄສຂອງເຈົ້າເອງ, ແລ້ວຄວາມພະຍາຍາມທັງໝົດຂອງເຈົ້າກໍຈະສູນເປົ່າ, ນີ້ຄືຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້!

ຈາກຄວາມແຕກຕ່າງລະຫວ່າງແກ່ນແທ້ຂອງເປໂຕ ແລະ ໂປໂລ ເຈົ້າຄວນເຂົ້າໃຈວ່າ ທຸກຄົນທີ່ບໍ່ສະແຫວງຫາຊີວິດ ແມ່ນພະຍາຍາມດ້ວຍຄວາມສູນເປົ່າ! ເຈົ້າເຊື່ອໃນພຣະເຈົ້າ ແລະ ຕິດຕາມພຣະເຈົ້າ ແລະ ດ້ວຍເຫດນັ້ນ ໃນຫົວໃຈຂອງເຈົ້າ ເຈົ້າກໍຕ້ອງຮັກພຣະເຈົ້າ. ເຈົ້າຕ້ອງປະຖິ້ມອຸປະນິໄສທີ່ເສື່ອມຊາມຂອງເຈົ້າ, ເຈົ້າຕ້ອງສະແຫວງຫາເພື່ອປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ ແລະ ຕ້ອງປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ. ຍ້ອນເຈົ້າເຊື່ອ ແລະ ຕິດຕາມພຣະເຈົ້າ, ເຈົ້າຄວນມອບທຸກສິ່ງໃຫ້ກັບພຣະອົງ ແລະ ບໍ່ຄວນເລືອກຕັດສິນໃຈ ຫຼື ຮຽກຮ້ອງເພື່ອສ່ວນຕົວ ແລະ ເຈົ້າຄວນບັນລຸການປະຕິບັດຕາມຄວາມປາຖະໜາຂອງພຣະເຈົ້າ. ຍ້ອນເຈົ້າຖືກສ້າງ, ເຈົ້າຈຶ່ງຄວນເຊື່ອຟັງພຣະຜູ້ເປັນເຈົ້າທີ່ສ້າງເຈົ້າ, ຍ້ອນວ່າ ໂດຍທຳມະຊາດແລ້ວ ເຈົ້າປາສະຈາກອຳນາດເໜືອຕົວເຈົ້າເອງ ແລະ ບໍ່ມີຄວາມສາມາດທີ່ຈະຄວບຄຸມຊະຕາກຳຂອງເຈົ້າເອງ. ຍ້ອນເຈົ້າເປັນຄົນທີ່ເຊື່ອໃນພຣະເຈົ້າ, ເຈົ້າຈຶ່ງຄວນສະແຫວງຫາຄວາມບໍລິສຸດ ແລະ ການປ່ຽນແປງ. ຍ້ອນເຈົ້າເປັນສິ່ງທີ່ຖືກສ້າງຂອງພຣະເຈົ້າ, ເຈົ້າຈຶ່ງຄວນຍຶດໝັ້ນກັບໜ້າທີ່ຂອງເຈົ້າ ແລະ ຮັກສາຕຳແໜ່ງຂອງເຈົ້າ ແລະ ເຈົ້າຕ້ອງບໍ່ກ້າວເກີນໜ້າທີ່ຂອງເຈົ້າ. ສິ່ງນີ້ບໍ່ແມ່ນເພື່ອຈຳກັດເຈົ້າ ຫຼື ຍັບຍັ້ງເຈົ້າຜ່ານທາງທິດສະດີ, ແຕ່ກົງກັນຂ້າມ ມັນຄືເສັ້ນທາງທີ່ເຮັດໃຫ້ເຈົ້າສາມາດປະຕິບັດໜ້າທີ່ຂອງເຈົ້າ ແລະ ມັນສາມາດບັນລຸໄດ້ ແລະ ທຸກຄົນທີ່ເຮັດສິ່ງຊອບທຳກໍຄວນບັນລຸສິ່ງນີ້ໃຫ້ໄດ້. ຖ້າເຈົ້າປຽບທຽບແກ່ນແທ້ຂອງເປໂຕ ແລະ ໂປໂລ, ແລ້ວເຈົ້າກໍຈະຮູ້ຈັກວິທີທີ່ເຈົ້າຄວນສະແຫວງຫາ. ໃນລະຫວ່າງເສັ້ນທາງຂອງເປໂຕ ແລະ ໂປໂລໄດ້ຍ່າງນັ້ນ, ໜຶ່ງໃນນັ້ນແມ່ນເສັ້ນທາງແຫ່ງການຖືກເຮັດໃຫ້ສົມບູນ ແລະ ອີກໜຶ່ງເສັ້ນທາງແມ່ນເສັ້ນທາງແຫ່ງການຖືກໂຍນອອກ; ເປໂຕ ແລະ ໂປໂລເປັນຕົວແທນໃຫ້ກັບສອງເສັ້ນທາງທີ່ແຕກຕ່າງກັນ. ເຖິງແມ່ນວ່າ ແຕ່ລະຄົນໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ແຕ່ລະຄົນໄດ້ຮັບເອົາແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະວິນຍານບໍລິສຸດ ແລະ ແຕ່ລະຄົນຍອມຮັບສິ່ງທີ່ພຣະເຢຊູເຈົ້າມອບໝາຍໃຫ້ກັບພວກເຂົາ, ໝາກຜົນທີ່ເກີດໃນແຕ່ລະຄົນກໍບໍ່ຄືກັນ: ຄົນໜຶ່ງເກີດຜົນຢ່າງແທ້ຈິງ ແລະ ອີກຄົນບໍ່ເກີດຜົນຢ່າງແທ້ຈິງ. ຈາກແກ່ນແທ້ຂອງພວກເຂົາ, ພາລະກິດທີ່ພວກເຂົາປະຕິບັດ, ສິ່ງທີ່ພວກເຂົາສະແດງອອກພາຍນອກ ແລະ ຜົນໄດ້ຮັບສຸດທ້າຍຂອງພວກເຂົານັ້ນ, ເຈົ້າຄວນເຂົ້າໃຈວ່າ ເສັ້ນທາງໃດທີ່ເຈົ້າຄວນຍ່າງ, ເສັ້ນທາງທີ່ເຈົ້າຄວນເລືອກທີ່ຈະຍ່າງ. ພວກເຂົາຍ່າງໃນສອງເສັ້ນທາງທີ່ແຕກຕ່າງກັນຢ່າງສິ້ນເຊີງ. ໂປໂລ ແລະ ເປໂຕ, ພວກເຂົາເປັນຕົວຢ່າງຂອງແຕ່ລະເສັ້ນທາງ ແລະ ດ້ວຍເຫດນັ້ນ ຕັ້ງແຕ່ຕົ້ນມາ ພວກເຂົາຈຶ່ງຖືກຈັດຂຶ້ນໃຫ້ເປັນແບບຢ່າງຂອງສອງເສັ້ນທາງເຫຼົ່ານີ້.

ແມ່ນຫຍັງຄືຈຸດສຳຄັນໃນປະສົບການຂອງໂປໂລ ແລະ ເປັນຫຍັງລາວຈຶ່ງສຳເລັດບໍ່ໄດ້? ແມ່ນຫຍັງຄືຈຸດສຳຄັນໃນປະສົບການຂອງເປໂຕ ແລະ ລາວປະສົບກັບການຖືກເຮັດໃຫ້ສົມບູນໄດ້ແນວໃດ? ຖ້າເຈົ້າປຽບທຽບສິ່ງທີ່ພວກເຂົາແຕ່ລະຄົນໃສ່ໃຈ, ແລ້ວເຈົ້າກໍ່ຈະຮູ້ວ່າ ພຣະເຈົ້າຕ້ອງການຄົນປະເພດໃດກັນແທ້, ຄວາມປະສົງຂອງພຣະເຈົ້າແມ່ນຫຍັງ, ອຸປະນິໄສຂອງພຣະເຈົ້າແມ່ນຫຍັງ, ຄົນປະເພດໃດທີ່ຈະຖືກເຮັດໃຫ້ສົມບູນໃນທີ່ສຸດ ແລະ ຍັງຮູ້ວ່າຄົນປະເພດໃດທີ່ບໍ່ຖືກເຮັດໃຫ້ສົມບູນ; ເຈົ້າຈະຮູ້ວ່າແມ່ນຫຍັງຄືອຸປະນິໄສຂອງຄົນທີ່ຈະຖືກເຮັດໃຫ້ສົມບູນ ແລະ ແມ່ນຫຍັງຄືອຸປະນິໄສຂອງຄົນທີ່ຈະບໍ່ຖືກເຮັດໃຫ້ສົມບູນ, ບັນຫາເຫຼົ່ານີ້ທີ່ຢູ່ໃນແກ່ນແທ້ກໍ່ສາມາດເຫັນໄດ້ໃນປະສົບການຂອງເປໂຕ ແລະ ໂປໂລ. ພຣະເຈົ້າສ້າງສັບພະສິ່ງທັງປວງ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງເຮັດໃຫ້ຊັບພະທຸກສິ່ງມາຢູ່ພາຍໃຕ້ອຳນາດຂອງພຣະອົງ ແລະ ຍອມຢູ່ພາຍໃຕ້ອຳນາດຂອງພຣະອົງ; ພຣະອົງຈະບັນຊາສິ່ງທັງປວງ, ເພື່ອວ່າສິ່ງທັງປວງຈະຢູ່ໃນກຳມືຂອງພຣະອົງ. ທຸກສິ່ງໃນການເນລະມິດສ້າງຂອງພຣະເຈົ້າ ລວມເຖິງສັດ, ພືດ, ມະນຸດຊາດ, ພູເຂົາ ແລະ ແມ່ນໍ້າ ແລະ ທະເລສາບ, ທຸກສິ່ງຕ້ອງມາຢູ່ພາຍໃຕ້ອຳນາດຂອງພຣະອົງ. ທຸກສິ່ງທີ່ຢູ່ເທິງທ້ອງຟ້າ ແລະ ເທິງແຜ່ນດິນໂລກຕ້ອງມາຢູ່ພາຍໃຕ້ອຳນາດຂອງພຣະອົງ. ພວກເຂົາບໍ່ມີທາງເລືອກອື່ນ ແລະ ລ້ວນແລ້ວແຕ່ຕ້ອງຍອມຢູ່ພາຍໃຕ້ການປັ້ນແຕ່ງຂອງພຣະອົງ. ສິ່ງນີ້ຖືກບັນຍັດໂດຍພຣະເຈົ້າ ແລະ ມັນເປັນສິດອຳນາດຂອງພຣະເຈົ້າ. ພຣະເຈົ້າບັນຊາທຸກສິ່ງ ແລະ ສັ່ງ ແລະ ຈັດຕຳແໜ່ງໃຫ້ສັບພະສິ່ງທັງປວງ ໂດຍທີ່ແຕ່ລະຢ່າງນັ້ນແມ່ນຖືກຈັດແຈງຕາມປະເພດຂອງໃຜມັນ ແລະ ຈັດແບ່ງຕາມຕຳແໜ່ງຂອງພວກເຂົາເອງ ຕາມຄວາມປະສົງຂອງພຣະເຈົ້າ. ບໍ່ວ່າມັນຈະຍິ່ງໃຫຍ່ສໍ່າໃດກໍຕາມ, ບໍ່ມີຫຍັງສາມາດລື່ນພຣະເຈົ້າໄດ້, ທຸກສິ່ງຮັບໃຊ້ມະນຸດຊາດທີ່ພຣະເຈົ້າສ້າງ ແລະ ບໍ່ມີສິ່ງໃດກ້າທີ່ຈະບໍ່ເຊື່ອຟັງພຣະເຈົ້າ ຫຼື ທີ່ຈະຮຽກຮ້ອງຫຍັງຈາກພຣະເຈົ້າໄດ້. ດ້ວຍເຫດນັ້ນມະນຸດ ໃນຖານະທີ່ເປັນສິ່ງທີ່ຖືກສ້າງຂອງພຣະເຈົ້າ ກໍຕ້ອງປະຕິບັດໜ້າທີ່ຂອງມະນຸດເຊັ່ນກັນ. ບໍ່ວ່າມະນຸດຈະເປັນເຈົ້ານາຍ ຫຼື ຜູ້ດູແລຂອງບັນດາສິ່ງທັງປວງ, ບໍ່ວ່າສະຖານະຂອງມະນຸດຈະສູງສົ່ງສໍ່າໃດກໍຕາມທ່າມກາງສິ່ງທັງປວງ, ຢ່າງໃດກໍຕາມ ພວກເຂົາກໍຍັງເປັນພຽງມະນຸດເລັກນ້ອຍທີ່ຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ ແລະ ບໍ່ໄດ້ເປັນຫຼາຍໄປກວ່າມະນຸດທີ່ບໍ່ສຳຄັນ ຫຼື ຫຼາຍກວ່າສິ່ງທີ່ຖືກສ້າງຂອງພຣະເຈົ້າ ແລະ ພວກເຂົາຈະບໍ່ຢູ່ເໜືອພຣະເຈົ້າໄດ້ຈັກເທື່ອ. ໃນຖານະທີ່ເປັນສິ່ງຖືກສ້າງຂອງພຣະເຈົ້າ, ມະນຸດຄວນສະແຫວງຫາເພື່ອປະຕິບັດໜ້າທີ່ຂອງສິ່ງທີ່ຖືກສ້າງຂອງພຣະເຈົ້າ ແລະ ສະແຫວງຫາເພື່ອຮັກພຣະເຈົ້າໂດຍບໍ່ຕັດສິນໃຈເປັນຢ່າງອື່ນ ຍ້ອນພຣະເຈົ້າສົມຄວນໄດ້ຮັບຄວາມຮັກຂອງມະນຸດ. ຄົນທີ່ສະແຫວງຫາເພື່ອຮັກພຣະເຈົ້າບໍ່ຄວນສະແຫວງຫາຜົນປະໂຫຍດສ່ວນຕົວ ຫຼື ສະແຫວງຫາສິ່ງທີ່ພວກເຂົາປາຖະໜາເປັນການສ່ວນຕົວ; ນີ້ຄືວິທີການສະແຫວງຫາທີ່ຖືກຕ້ອງທີ່ສຸດ. ຖ້າສິ່ງທີ່ເຈົ້າສະແຫວງຫາແມ່ນຄວາມຈິງ, ຖ້າສິ່ງທີ່ເຈົ້ານຳເຂົ້າສູ່ການປະຕິບັດກໍແມ່ນຄວາມຈິງ ແລະ ຖ້າສິ່ງທີ່ເຈົ້າບັນລຸກໍຄືການປ່ຽນແປງໃນອຸປະນິໄສຂອງເຈົ້າ, ແລ້ວເສັ້ນທາງທີ່ເຈົ້າຍ່າງກໍເປັນເສັ້ນທາງທີ່ຖືກຕ້ອງ. ຖ້າສິ່ງທີ່ເຈົ້າສະແຫວງຫາຄືຄວາມສຸກທາງເນື້ອໜັງ ແລະ ສິ່ງທີ່ເຈົ້ານຳເຂົ້າສູ່ການປະຕິບັດແມ່ນຄວາມຈິງຈາກແນວຄິດຂອງເຈົ້າເອງ ແລະ ຖ້າບໍ່ມີການປ່ຽນແປງໃນອຸປະນິໄສຂອງເຈົ້າ ແລະ ເຈົ້າບໍ່

ເຊື່ອຟັງພຣະເຈົ້າທີ່ສະຖິດຢູ່ໃນເນື້ອໜັງເລີຍ ແລະ ເຈົ້າຍັງດຳລົງຊີວິດຢູ່ກັບຄວາມເລື່ອນລອຍ, ແລ້ວສິ່ງທີ່ເຈົ້າສະແຫວງຫາກໍຈະນຳພາເຈົ້າໄປສູ່ນະຮົກຢ່າງແນ່ນອນ, ຍ້ອນວ່າເສັ້ນທາງທີ່ເຈົ້າຍ່າງນັ້ນເປັນເສັ້ນທາງແຫ່ງຄວາມລົ້ມເຫຼວ. ບໍ່ວ່າເຈົ້າຈະຖືກເຮັດໃຫ້ສົມບູນ ຫຼື ຖືກໂຍນອອກແມ່ນຂຶ້ນຢູ່ກັບການສະແຫວງຫາຂອງເຈົ້າເອງ ເຊິ່ງໝາຍຄວາມວ່າ ຄວາມສຳເລັດ ຫຼື ຄວາມລົ້ມເຫຼວແມ່ນຂຶ້ນຢູ່ກັບເສັ້ນທາງທີ່ມະນຸດຍ່າງ.

# ພາລະກິດຂອງພຣະເຈົ້າ ແລະ ພາລະກິດຂອງມະນຸດ

ມີພາລະກິດຂອງມະນຸດຫຼາຍເທົ່າໃດທີ່ເປັນພາລະກິດຂອງພຣະວິນຍານບໍລິສຸດ ແລະ ມີຫຼາຍເທົ່າໃດທີ່ເປັນປະສົບການຂອງມະນຸດ? ມັນສາມາດເວົ້າໄດ້ວ່າ ຜູ້ຄົນຍັງບໍ່ເຂົ້າໃຈຄຳຖາມເຫຼົ່ານີ້ ແລະ ເຫດຜົນທີ່ພວກເຂົາບໍ່ເຂົ້າໃຈຫຼັກການແຫ່ງພາລະກິດຂອງພຣະວິນຍານບໍລິສຸດ. ເມື່ອເຮົາເວົ້າວ່າ "ພາລະກິດຂອງມະນຸດ", ແນ່ນອນ ເຮົາໝາຍເຖິງພາລະກິດຂອງຄົນທີ່ມີພາລະກິດຂອງພຣະວິນຍານບໍລິສຸດ ຫຼື ຄົນທີ່ຖືກໃຊ້ໂດຍພຣະວິນຍານບໍລິສຸດ. ເຮົາບໍ່ໄດ້ໝາຍເຖິງພາລະກິດທີ່ກຳເນີດຈາກຄວາມປະສົງຂອງມະນຸດ ແຕ່ແມ່ນພາລະກິດຂອງພວກອັກຄະສາວົກ, ຄົນປະຕິບັດພາລະກິດ ຫຼື ອ້າຍເອື້ອຍນ້ອງທຳມະດາຕົກຢູ່ພາຍໃນຂອບເຂດຂອງພາລະກິດຂອງພຣະວິນຍານບໍລິສຸດ. ໃນທີ່ນີ້ "ພາລະກິດຂອງມະນຸດ" ບໍ່ໄດ້ໝາຍເຖິງພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແຕ່ແມ່ນຂອບເຂດ ແລະ ຫຼັກການຂອງພາລະກິດທີ່ພຣະວິນຍານບໍລິສຸດປະຕິບັດໃນຜູ້ຄົນ. ເຖິງແມ່ນວ່າຫຼັກການເຫຼົ່ານີ້ແມ່ນຫຼັກການ ແລະ ຂອບເຂດແຫ່ງພາລະກິດຂອງພຣະວິນຍານບໍລິສຸດ, ພວກມັນບໍ່ແມ່ນສິ່ງດຽວກັນກັບຫຼັກການ ແລະ ຂອບເຂດແຫ່ງພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ພາລະກິດຂອງມະນຸດມີແກ່ນແທ້ ແລະ ຫຼັກການຂອງມະນຸດ ແລະ ພາລະກິດຂອງພຣະເຈົ້າມີແກ່ນແທ້ ແລະ ຫຼັກການຂອງພຣະເຈົ້າ.

ພາລະກິດໃນກະແສຂອງພຣະວິນຍານບໍລິສຸດ, ບໍ່ວ່າຈະແມ່ນພາລະກິດຂອງພຣະເຈົ້າເອງ ຫຼື ພາລະກິດຂອງຜູ້ຄົນທີ່ຖືກໃຊ້, ແມ່ນພາລະກິດຂອງພຣະວິນຍານບໍລິສຸດ. ແກ່ນແທ້ຂອງພຣະເຈົ້າເອງແມ່ນພຣະວິນຍານ ເຊິ່ງສາມາດເອີ້ນໄດ້ວ່າ ພຣະວິນຍານບໍລິສຸດ ຫຼື ພຣະວິນຍານທີ່ຮຸນແຮງຂຶ້ນເຈັດເທົ່າ. ເບິ່ງໂດຍລວມແລ້ວ ພຣະອົງກໍແມ່ນພຣະວິນຍານຂອງພຣະເຈົ້າ, ເຖິງແມ່ນພຣະວິນຍານຂອງພຣະເຈົ້າໄດ້ຖືກເອີ້ນດ້ວຍຊື່ທີ່ແຕກຕ່າງກັນໃນຍຸກທີ່ແຕກຕ່າງກັນ. ແກ່ນແທ້ຂອງພຣະອົງຍັງເປັນອັນໜຶ່ງອັນດຽວກັນ. ດ້ວຍເຫດນັ້ນ ພາລະກິດຂອງພຣະເຈົ້າເອງແມ່ນພາລະກິດຂອງພຣະວິນຍານບໍລິສຸດ, ໃນຂະນະທີ່ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດກໍບໍ່ແມ່ນໃຜນອກເໜືອຈາກພຣະວິນຍານບໍລິສຸດທີ່ປະຕິບັດພາລະກິດ. ພາລະກິດຂອງຜູ້ຄົນທີ່ຖືກໃຊ້ຍັງເປັນພາລະກິດຂອງພຣະວິນຍານບໍລິສຸດເຊັ່ນດຽວກັນ. ແຕ່ພາລະກິດຂອງພຣະເຈົ້າເປັນການສະແດງອອກຢ່າງສົມບູນຂອງພຣະວິນຍານບໍລິສຸດ ເຊິ່ງເປັນຈິງແທ້ໆ, ໃນຂະນະທີ່ພາລະກິດຂອງຜູ້ຄົນທີ່ຖືກໃຊ້ແມ່ນໄດ້ປະສົມກັບສິ່ງທີ່ເປັນມະນຸດຫຼາຍຢ່າງ ແລະ ບໍ່ແມ່ນການສະແດງອອກໂດຍກົງຂອງພຣະວິນຍານບໍລິສຸດ, ແຮງໄກທີ່ຈະເປັນການສະແດງອອກຢ່າງສົມບູນຂອງພຣະອົງ. ພາລະກິດຂອງພຣະວິນຍານບໍລິສຸດມີຫຼາກຫຼາຍ ແລະ ບໍ່ຖືກຈຳກັດໂດຍເງື່ອນໄຂໃດໆ. ພາລະກິດຂອງພຣະວິນຍານບໍລິສຸດມີຄວາມຫຼາກຫຼາຍໃນຜູ້ຄົນທີ່ແຕກຕ່າງກັນ; ມັນສະແດງທາດແທ້ທີ່ແຕກຕ່າງກັນ ແລະ ມັນແຕກຕ່າງກັນໃນແຕ່ລະຍຸກ ພ້ອມທັງໃນແຕ່ລະປະເທດ. ແນ່ນອນ, ເຖິງແມ່ນພຣະວິນຍານບໍລິສຸດປະຕິບັດພາລະກິດດ້ວຍຫຼາຍວິທີທີ່ແຕກຕ່າງກັນ ແລະ ສອດຄ່ອງກັບຫຼັກການຫຼາຍຢ່າງ, ບໍ່ວ່າພາລະກິດຈະສຳເລັດແນວໃດກໍຕາມ ຫຼື ໃນ

ຄົນປະເພດໃດກໍຕາມ, ແກ່ນແທ້ຂອງພາລະກິດນັ້ນກໍແຕກຕ່າງກັນຢູ່ສະເໝີ; ພາລະກິດທັງໝົດທີ່ປະຕິບັດໃນຜູ້ຄົນທີ່ແຕກຕ່າງກັນແມ່ນມີຫຼັກການຂອງມັນ ແລະ ພາລະກິດທັງໝົດສາມາດເປັນຕົວແທນໃຫ້ແກ່ແກ່ນແທ້ຂອງຈຸດມຸ່ງໝາຍຂອງພາລະກິດນັ້ນ. ສິ່ງນີ້ເກີດຂຶ້ນກໍຍ້ອນພາລະກິດຂອງພຣະວິນຍານບໍລິສຸດຂ້ອນຂ້າງເຈາະຈົງໃນຂອບເຂດ ແລະ ຂ້ອນຂ້າງມີການວັດແທກ. ພາລະກິດທີ່ສຳເລັດລົງໃນເນື້ອໜັງທີ່ບັງເກີດເປັນມະນຸດບໍ່ຄືກັບພາລະກິດທີ່ປະຕິບັດໃນຜູ້ຄົນ ແລະ ພາລະກິດຍັງມີຄວາມຫຼາກຫຼາຍຕາມຄວາມສາມາດຂອງຜູ້ຄົນທີ່ໄດ້ຮັບການປະຕິບັດຈາກພາລະກິດ. ພາລະກິດທີ່ປະຕິບັດໃນເນື້ອໜັງທີ່ບັງເກີດເປັນມະນຸດແມ່ນບໍ່ໄດ້ປະຕິບັດໃນຜູ້ຄົນ ແລະ ມັນບໍ່ແມ່ນພາລະກິດດຽວກັນກັບທີ່ຖືກປະຕິບັດໃນຜູ້ຄົນ. ເວົ້າສັ້ນໆກໍຄື ບໍ່ວ່າຈະປະຕິບັດພາລະກິດແນວໃດກໍຕາມ, ພາລະກິດທີ່ຖືກປະຕິບັດດ້ວຍຈຸດປະສົງທີ່ແຕກຕ່າງກັນກໍບໍ່ເຄີຍເປັນອັນດຽວກັນຈັກເທື່ອ ແລະ ຫຼັກການທີ່ພຣະອົງປະຕິບັດພາລະກິດກໍແຕກຕ່າງກັນຕາມສະພາວະ ແລະ ທຳມະຊາດຂອງຄວາມແຕກຕ່າງຂອງມະນຸດທີ່ພຣະອົງປະຕິບັດພາລະກິດໃສ່. ພຣະວິນຍານບໍລິສຸດປະຕິບັດພາລະກິດໃນຜູ້ຄົນທີ່ແຕກຕ່າງກັນ ໂດຍອີງຕາມແກ່ນແທ້ຕາມທຳມະຊາດຂອງພວກເຂົາ ແລະ ບໍ່ໄດ້ຮຽກຮ້ອງໃນສິ່ງທີ່ນອກເໜືອແກ່ນແທ້ນັ້ນ ຫຼື ພຣະອົງບໍ່ປະຕິບັດພາລະກິດທີ່ຢູ່ນອກເໜືອຄວາມສາມາດທີ່ແທ້ຈິງຂອງພວກເຂົາ. ດ້ວຍເຫດນັ້ນ ພາລະກິດຂອງພຣະວິນຍານບໍລິສຸດໃນມະນຸດຈຶ່ງເຮັດໃຫ້ຜູ້ຄົນເຫັນແກ່ນແທ້ຂອງຈຸດປະສົງຂອງພາລະກິດນັ້ນ. ທາດແທ້ຕາມທຳມະຊາດຂອງມະນຸດບໍ່ປ່ຽນແປງ; ຄວາມສາມາດຕາມທຳມະຊາດຂອງເຂົາກໍມີຂໍ້ຈຳກັດ. ພຣະວິນຍານບໍລິສຸດໃຊ້ຜູ້ຄົນ ຫຼື ປະຕິບັດພາລະກິດໃນພວກເຂົາຕາມຂໍ້ຈຳກັດຂອງຄວາມສາມາດຂອງພວກເຂົາ, ເພື່ອພວກເຂົາອາດຈະໄດ້ຮັບຜົນປະໂຫຍດຈາກສິ່ງນັ້ນ. ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດໃນມະນຸດທີ່ຖືກໃຊ້, ພອນສະຫວັນ ແລະ ຄວາມສາມາດຕາມທຳມະຊາດຂອງຜູ້ຄົນເຫຼົ່ານັ້ນກໍມີບົດບາດ, ບໍ່ໄດ້ຖືກຢັບຢັ້ງ. ຄວາມສາມາດຕາມທຳມະຊາດຂອງພວກເຂົາຈະຖືກນຳມາໃຊ້ເພື່ອຮັບໃຊ້ພາລະກິດ. ມັນສາມາດເວົ້າໄດ້ວ່າ ພຣະອົງໃຊ້ພາກສ່ວນຂອງມະນຸດທີ່ສາມາດໃຊ້ໃນພາລະກິດຂອງພຣະອົງ, ເພື່ອບັນລຸຜົນໃນພາລະກິດນັ້ນ. ກົງກັນຂ້າມ ພາລະກິດທີ່ຖືກປະຕິບັດໃນເນື້ອໜັງທີ່ບັງເກີດເປັນມະນຸດກໍສະແດງອອກເຖິງພາລະກິດຂອງພຣະວິນຍານໂດຍກົງ ແລະ ບໍ່ໄດ້ປະສົມກັບຈິດໃຈ ແລະ ຄວາມຄິດຂອງມະນຸດ; ພອນສະຫວັນຂອງມະນຸດ ຫຼື ປະສົບການຂອງມະນຸດ ຫຼື ສະພາບການພາຍໃນຂອງມະນຸດບໍ່ສາມາດຢັ່ງເຖິງໄດ້. ພາລະກິດທັງໝົດທີ່ນັບບໍ່ຖ້ວນຂອງພຣະວິນຍານບໍລິສຸດແມ່ນເພື່ອໃຫ້ປະໂຫຍດ ແລະ ສັ່ງສອນມະນຸດ. ເຖິງຢ່າງໃດກໍຕາມ ບາງຄົນສາມາດຖືກເຮັດໃຫ້ສົມບູນ ໃນຂະນະທີ່ຄົນອື່ນບໍ່ມີເງື່ອນໄຂສູ່ຄວາມສົມບູນ, ເຊິ່ງໝາຍຄວາມວ່າ ພວກເຂົາບໍ່ສາມາດຖືກເຮັດໃຫ້ສົມບູນ ແລະ ອາດບໍ່ສາມາດໄດ້ຮັບການຊ່ວຍໃຫ້ພົ້ນ ແລະ ເຖິງແມ່ນວ່າ ພວກເຂົາອາດມີພາລະກິດຂອງພຣະວິນຍານບໍລິສຸດ, ພວກເຂົາກໍຈະຖືກກຳຈັດໃນທີ່ສຸດ. ນັ້ນໝາຍຄວາມວ່າ ເຖິງແມ່ນພາລະກິດຂອງພຣະວິນຍານບໍລິສຸດແມ່ນເພື່ອສັ່ງສອນຜູ້ຄົນ, ຄົນໆໜຶ່ງບໍ່ສາມາດເວົ້າໄດ້ວ່າ ທຸກຄົນທີ່ມີພາລະກິດຂອງພຣະວິນຍານບໍລິສຸດຈະຖືກເຮັດໃຫ້ສົມບູນຢ່າງຄົບຖ້ວນ, ຍ້ອນເສັ້ນທາງທີ່ຫຼາຍຄົນຕິດຕາມໃນການສະແຫວງຫາ

ຂອງພວກເຂົາບໍ່ແມ່ນເສັ້ນທາງສູ່ການຖືກເຮັດໃຫ້ສົມບູນ. ພວກເຂົາມີພຽງພາລະກິດຝ່າຍດຽວຂອງພຣະວິນຍານບໍລິສຸດ, ບໍ່ແມ່ນການຮ່ວມມືຕາມຄວາມຄິດຂອງມະນຸດ ຫຼື ການສະແຫວງຫາທີ່ຖືກຕ້ອງຂອງມະນຸດ. ສະນັ້ນ ພາລະກິດຂອງພຣະວິນຍານບໍລິສຸດໃນຜູ້ຄົນເຫຼົ່ານີ້ກໍມາຮັບໃຊ້ຄົນທີ່ກຳລັງຖືກເຮັດໃຫ້ສົມບູນ. ຜູ້ຄົນບໍ່ສາມາດເຫັນພາລະກິດຂອງພຣະວິນຍານບໍລິສຸດໂດຍກົງໄດ້ ຫຼື ບໍ່ສາມາດສຳຜັດໂດຍກົງດ້ວຍຕົວຂອງພວກເຂົາເອງໄດ້. ມັນພຽງແຕ່ສາມາດສະແດງອອກໂດຍຄົນທີ່ມີພອນສະຫວັນໃນການປະຕິບັດພາລະກິດ, ເຊິ່ງໝາຍຄວາມວ່າ ພາລະກິດຂອງພຣະວິນຍານບໍລິສຸດແມ່ນຖືກຈັດກຽມໃຫ້ແກ່ຜູ້ຕິດຕາມຜ່ານການສະແດງອອກຂອງມະນຸດ.

ພາລະກິດຂອງພຣະວິນຍານບໍລິສຸດຖືກເຮັດໃຫ້ສຳເລັດ ແລະ ສົມບູນຜ່ານຄົນຫຼາຍປະເພດ ແລະສະພາບການທີ່ແຕກຕ່າງກັນຫຼາຍຢ່າງ. ເຖິງແມ່ນພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດສາມາດເປັນຕົວແທນໃຫ້ແກ່ພາລະກິດຂອງຍຸກທັງໝົດ ແລະ ສາມາດເປັນຕົວແທນໃຫ້ແກ່ທາງເຂົ້າສູ່ຍຸກທັງໝົດຂອງຜູ້ຄົນ, ພາລະກິດກ່ຽວກັບລາຍລະອຽດທາງເຂົ້າຂອງຜູ້ຄົນຍັງຕ້ອງໄດ້ປະຕິບັດໂດຍມະນຸດທີ່ໃຊ້ໂດຍພຣະວິນຍານບໍລິສຸດ, ບໍ່ແມ່ນໂດຍພຣະເຈົ້າທີ່ບັງເກີດເປັນມະນຸດ. ດ້ວຍເຫດນັ້ນ ພາລະກິດຂອງພຣະເຈົ້າ ຫຼື ພັນທະກິດຂອງພຣະເຈົ້າເອງແມ່ນພາລະກິດຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ເຊິ່ງມະນຸດບໍ່ສາມາດເຮັດແທນພຣະອົງໄດ້. ພາລະກິດຂອງພຣະວິນຍານບໍລິສຸດຖືກເຮັດໃຫ້ສຳເລັດຜ່ານຄົນຫຼາຍປະເພດທີ່ແຕກຕ່າງກັນ; ບໍ່ມີບຸກຄົນໃດໜຶ່ງສາມາດບັນລຸມັນໄດ້ທັງໝົດ ແລະບໍ່ມີບຸກຄົນໃດສາມາດກ່າວມັນອອກຢ່າງຄົບຖ້ວນ. ຄົນທີ່ນຳພາຄຣິສຕະຈັກຍັງບໍ່ສາມາດເປັນຕົວແທນໃຫ້ແກ່ພາລະກິດຂອງພຣະວິນຍານບໍລິສຸດຢ່າງຄົບຖ້ວນ; ພວກເຂົາພຽງແຕ່ສາມາດປະຕິບັດພາລະກິດໃນການນຳພາບາງຢ່າງ. ດ້ວຍເຫດນັ້ນ ພາລະກິດຂອງພຣະວິນຍານບໍລິສຸດສາມາດແບ່ງອອກເປັນສາມພາກສ່ວນ: ພາລະກິດຂອງພຣະເຈົ້າເອງ, ພາລະກິດຂອງມະນຸດທີ່ຖືກໃຊ້ ແລະ ພາລະກິດໃນທຸກຄົນທີ່ຢູ່ໃນກະແສຂອງພຣະວິນຍານບໍລິສຸດ. ພາລະກິດຂອງພຣະເຈົ້າເອງແມ່ນເພື່ອນຳພາຍຸກທັງໝົດ; ໂດຍຖືກສົ່ງໄປ ຫຼື ຮັບການຝາກຝັງຫຼັງຈາກທີ່ພຣະເຈົ້າໄດ້ປະຕິບັດພາລະກິດຂອງພຣະອົງເອງ ພາລະກິດຂອງຄົນທີ່ຖືກໃຊ້ແມ່ນເພື່ອນຳພາຜູ້ຕິດຕາມຂອງພຣະເຈົ້າ ແລະ ຄົນເຫຼົ່ານີ້ແມ່ນຄົນທີ່ຮ່ວມມືກັບພາລະກິດຂອງພຣະເຈົ້າ; ພາລະກິດທີ່ຖືກປະຕິບັດໂດຍພຣະວິນຍານບໍລິສຸດໃນຄົນທີ່ຢູ່ໃນກະແສແມ່ນເພື່ອຮັກສາພາລະກິດທຸກຢ່າງຂອງພຣະອົງເອງ, ນັ້ນກໍຄື ເພື່ອຮັກສາການຄຸ້ມຄອງທັງໝົດຂອງພຣະອົງ ແລະ ຄຳພະຍານຂອງພຣະອົງ, ໃນຂະນະດຽວກັນນັ້ນກໍເຮັດໃຫ້ຄົນທີ່ສາມາດຖືກເຮັດໃຫ້ສົມບູນນັ້ນສົມບູນ. ພ້ອມກັນນັ້ນ ສາມພາກສ່ວນເຫຼົ່ານີ້ແມ່ນພາລະກິດທີ່ສົມບູນຂອງພຣະວິນຍານບໍລິສຸດ, ແຕ່ຖ້າປາສະຈາກພາລະກິດຂອງພຣະເຈົ້າເອງ, ພາລະກິດການຄຸ້ມຄອງທັງໝົດກໍຈະຢູ່ລ້າໆ. ພາລະກິດຂອງພຣະເຈົ້າເອງກ່ຽວຂ້ອງກັບພາລະກິດຂອງມະນຸດຊາດທັງໝົດ ແລະ ມັນຍັງເປັນຕົວແທນໃຫ້ແກ່ພາລະກິດຂອງຍຸກທັງໝົດອີກດ້ວຍ ເຊິ່ງໝາຍຄວາມວ່າ ພາລະກິດຂອງພຣະເຈົ້າເອງເປັນຕົວແທນໃຫ້ແກ່ການເຄື່ອນໄຫວ ແລະ ແນວທາງຂອງພາລະກິດຂອງພຣະວິນຍານບໍລິສຸດ, ໃນຂະນະທີ່ພາລະກິດຂອງພວກອັກຄະສາວົກເກີດຂຶ້ນຫຼັງຈາກພາລະກິດຂອງພຣະເຈົ້າເອງ ແລະ ຕາມມາພາຍຫຼັງພາລະກິດນັ້ນ

ແລະ ບໍ່ໄດ້ນຳພາຍຸກ ຫຼື ມັນບໍ່ໄດ້ສະແດງເຖິງແນວທາງພາລະກິດຂອງພຣະວິນຍານບໍລິສຸດໃນຍຸກທັງໝົດ. ພວກເຂົາພຽງແຕ່ປະຕິບັດພາລະກິດທີ່ມະນຸດຄວນປະຕິບັດ, ເຊິ່ງບໍ່ກ່ຽວຂ້ອງກັບພາລະກິດການຄຸ້ມຄອງເລີຍ. ພາລະກິດທີ່ພຣະເຈົ້າປະຕິບັດດ້ວຍຕົນເອງແມ່ນໂຄງການພາຍໃນພາລະກິດການຄຸ້ມຄອງ. ພາລະກິດຂອງມະນຸດພຽງແຕ່ແມ່ນໜ້າທີ່ໆຜູ້ຄົນທີ່ຖືກໃຊ້ນັ້ນປະຕິບັດ ແລະ ມັນບໍ່ມີສ່ວນກ່ຽວພັນກັບພາລະກິດການຄຸ້ມຄອງ. ເຖິງແມ່ນຈະມີຂໍ້ແທ້ຈິງທີ່ທັງສອງຢ່າງແມ່ນພາລະກິດຂອງພຣະວິນຍານບໍລິສຸດ, ເນື່ອງຈາກຄວາມແຕກຕ່າງໃນຕົວຕົນ ແລະ ການເປັນຕົວຂອງພາລະກິດນັ້ນ, ມີຄວາມແຕກຕ່າງທີ່ຊັດເຈນ ແລະ ສຳຄັນລະຫວ່າງພາລະກິດຂອງພຣະເຈົ້າເອງ ແລະ ພາລະກິດຂອງມະນຸດ. ຍິ່ງໄປກວ່ານັ້ນ ຂອບເຂດຂອງພາລະກິດທີ່ປະຕິບັດໂດຍພຣະວິນຍານບໍລິສຸດມີຄວາມຫຼາກຫຼາຍໃນຈຸດມຸ່ງໝາຍທີ່ມີຕົວຕົນທີ່ແຕກຕ່າງກັນ. ສິ່ງເຫຼົ່ານີ້ແມ່ນຫຼັກການ ແລະ ຂອບເຂດຂອງພາລະກິດຂອງພຣະວິນຍານບໍລິສຸດ.

ພາລະກິດຂອງມະນຸດສະແດງເຖິງປະສົບການຂອງເຂົາ ແລະ ຄວາມເປັນມະນຸດຂອງເຂົາ. ສິ່ງທີ່ມະນຸດສະໜອງ ແລະ ພາລະກິດທີ່ເຂົາປະຕິບັດກໍເປັນຕົວແທນໃຫ້ແກ່ເຂົາ. ຄວາມເຂົ້າໃຈຂອງມະນຸດ, ເຫດຜົນຂອງມະນຸດ, ຕັກກະຂອງມະນຸດ ແລະ ຈິນຕະນາການທີ່ອຸດົມສົມບູນຂອງເຂົາແມ່ນລ້ວນແລ້ວແຕ່ຖືກລວມຢູ່ໃນພາລະກິດຂອງເຂົາ. ໂດຍສະເພາະ ປະສົບການຂອງມະນຸດສາມາດສະແດງໃຫ້ເຫັນເຖິງພາລະກິດຂອງເຂົາ ແລະ ປະສົບການຂອງຜູ້ຄົນກໍໄດ້ກາຍມາເປັນສ່ວນປະກອບຂອງພາລະກິດຂອງເຂົາ. ພາລະກິດຂອງມະນຸດສາມາດສະແດງເຖິງປະສົບການຂອງເຂົາ. ເມື່ອບາງຄົນກຳລັງຜະເຊີນກັບສິ່ງທີ່ບໍ່ດີ, ພາສາສ່ວນໃຫຍ່ໃນການສົນທະນາຂອງພວກເຂົາແມ່ນປະກອບດ້ວຍອົງປະກອບທີ່ບໍ່ດີ. ຖ້າປະສົບການຂອງພວກເຂົາໃນໄລຍະເວລາໃດໜຶ່ງຢູ່ໃນທາງບວກ ແລະ ໂດຍສະເພາະ ພວກເຂົາມີເສັ້ນທາງໃນລັກສະນະທີ່ເປັນບວກ, ການສົນທະນາຂອງພວກເຂົາແມ່ນສິ່ງທີ່ໃຫ້ກຳລັງໃຈຫຼາຍ ແລະ ຜູ້ຄົນຈະສາມາດຮັບການສະໜອງໃນທາງບວກຈາກສິ່ງເຫຼົ່ານີ້. ຖ້າຄົນປະຕິບັດພາລະກິດເລີ່ມຄິດລົບໃນໄລຍະເວລາໃດໜຶ່ງ, ການສົນທະນາຂອງເຂົາຈະມີອົງປະກອບໃນທາງລົບສະເໝີ. ການສົນທະນາປະເພດນີ້ເປັນຕາເສົ້າໃຈ ແລະ ຄົນອື່ນກໍຈະເສົ້າໃຈຢ່າງບໍ່ຮູ້ຕົວຫຼັງຈາກການສົນທະນາຂອງເຂົາ. ສະພາວະຂອງຜູ້ຕິດຕາມປ່ຽນໄປຕາມສະພາວະຂອງຜູ້ນຳ. ສິ່ງທີ່ຄົນປະຕິບັດພາລະກິດເປັນໃນຂ້າງໃນນັ້ນກໍຄືສິ່ງເຂົາສະແດງອອກມາ ແລະ ພາລະກິດຂອງພຣະວິນຍານບໍລິສຸດມັກຈະປ່ຽນແປງຕາມສະພາວະຂອງມະນຸດ. ພຣະອົງປະຕິບັດພາລະກິດຕາມປະສົບການຂອງມະນຸດ ແລະ ບໍ່ບັງຄັບພວກເຂົາ ແຕ່ຮຽກຮ້ອງໃຫ້ຜູ້ຄົນປະຕິບັດຕາມຊ່ວງເວລາແຫ່ງປະສົບການປົກກະຕິຂອງພວກເຂົາ. ນີ້ໝາຍຄວາມວ່າ ການສົນທະນາຂອງມະນຸດແຕກຕ່າງຈາກພຣະທຳຂອງພຣະເຈົ້າ. ສິ່ງທີ່ມະນຸດສົນທະນາສື່ເຖິງຄວາມເຂົ້າໃຈ ແລະ ປະສົບການສ່ວນຕົວຂອງພວກເຂົາ, ສະແດງເຖິງຄວາມເຂົ້າໃຈ ແລະ ປະສົບການຂອງພວກເຂົາບົນພື້ນຖານຂອງພາລະກິດຂອງພຣະເຈົ້າ. ໜ້າທີ່ຂອງພວກເຂົາແມ່ນເພື່ອຄົ້ນຫາສິ່ງທີ່ພວກເຂົາຄວນປະຕິບັດ ຫຼື ເຂົ້າສູ່ ຫຼັງຈາກພຣະເຈົ້າປະຕິບັດພາລະກິດ ຫຼື ກ່າວ, ແລ້ວມອບໝາຍໃຫ້ກັບຜູ້ຕິດຕາມ. ດ້ວຍເຫດນັ້ນ ພາລະກິດຂອງມະນຸດຈຶ່ງເປັນຕົວແທນໃຫ້ແກ່ທາງເຂົ້າ ແລະ ການ

ປະຕິບັດຂອງເຂົາ. ແນ່ນອນ ພາລະກິດດັ່ງກ່າວແມ່ນປະສົມກັບບົດຮຽນ ແລະ ປະສົບການຂອງມະນຸດ ຫຼື ຄວາມຄິດບາງຢ່າງຂອງມະນຸດ. ບໍ່ວ່າພຣະວິນຍານບໍລິສຸດຈະປະຕິບັດພາລະກິດແນວໃດກໍຕາມ, ບໍ່ວ່າພຣະອົງຈະປະຕິບັດພາລະກິດໃນມະນຸດ ຫຼື ໃນພຣະເຈົ້າທີ່ບັງເກີດເປັນມະນຸດ ຄົນປະຕິບັດພາລະກິດສະແດງເຖິງສິ່ງທີ່ພວກເຂົາເປັນຢູ່ສະເໝີ. ເຖິງແມ່ນພຣະວິນຍານບໍລິສຸດເປັນຜູ້ປະຕິບັດພາລະກິດ, ພາລະກິດກໍຈະຖືກຄົ້ນພົບໃນສິ່ງທີ່ມະນຸດເປັນໂດຍທຳມະຊາດ, ຍ້ອນພຣະວິນຍານບໍລິສຸດບໍ່ປະຕິບັດພາລະກິດໂດຍປາສະຈາກພື້ນຖານ. ເວົ້າໄດ້ອີກຢ່າງໜຶ່ງກໍຄື ພາລະກິດບໍ່ໄດ້ມາຈາກຄວາມວ່າງເປົ່າ, ແຕ່ປະຕິບັດໂດຍສອດຄ່ອງກັບສະພາບຕົວຈິງ ແລະ ເງື່ອນໄຂທີ່ເປັນຈິງຢູ່ສະເໝີ. ມີພຽງແຕ່ວິທີນີ້ເທົ່ານັ້ນ ອຸປະນິໄສຂອງມະນຸດ ແລະ ແນວຄິດເດີມຂອງເຂົາ ແລະ ຄວາມຄິດເດີມຂອງເຂົາຈຶ່ງຈະສາມາດໄດ້ຮັບການປ່ຽນແປງ. ສິ່ງທີ່ມະນຸດສະແດງອອກແມ່ນສິ່ງທີ່ເຂົາເຫັນ, ຜະເຊີນ ແລະ ສາມາດຈິນຕະນາການໄດ້ ແລະ ມັນສາມາດເຂົ້າເຖິງໄດ້ໂດຍຄວາມຄິດຂອງມະນຸດ, ເຖິງແມ່ນວ່າມັນຄືທິດສະດີ ຫຼື ແນວຄິດ. ພາລະກິດຂອງມະນຸດບໍ່ສາມາດເກີນຂອບເຂດປະສົບການຂອງມະນຸດ ຫຼື ສິ່ງທີ່ມະນຸດເຫັນ ຫຼື ສິ່ງທີ່ມະນຸດສາມາດຈິນຕະນາການ ຫຼື ຄົ້ນຄິດຂຶ້ນໄດ້ ບໍ່ວ່າຂະໜາດຂອງພາລະກິດຈະສໍ່າໃດກໍຕາມ. ທຸກສິ່ງທີ່ພຣະເຈົ້າສະແດງອອກແມ່ນສິ່ງທີ່ເປັນພຣະເຈົ້າເອງ ແລະ ສິ່ງນີ້ແມ່ນບໍ່ສາມາດບັນລຸໄດ້ໂດຍມະນຸດ ນັ້ນກໍຄື ນອກເໜືອການຢັ່ງເຖິງຈາກຄວາມຄິດຂອງມະນຸດ. ພຣະອົງສະແດງພາລະກິດແຫ່ງການນໍາພາມະນຸດຊາດທັງໝົດຂອງພຣະອົງ ແລະ ສິ່ງນີ້ບໍ່ກ່ຽວຂ້ອງກັບລາຍລະອຽດຂອງປະສົບການມະນຸດ, ແຕ່ກົງກັນຂ້າມ ແມ່ນກ່ຽວຂ້ອງກັບການຄຸ້ມຄອງຂອງພຣະອົງເອງ. ສິ່ງທີ່ມະນຸດສະແດງອອກປະສົບການຂອງພວກເຂົາ ໃນຂະນະທີ່ສິ່ງທີ່ພຣະເຈົ້າສະແດງອອກແມ່ນອຸປະນິໄສໂດຍທໍາມະຊາດຂອງພຣະອົງ, ຢູ່ນອກເໜືອການຢັ່ງເຖິງຂອງມະນຸດ. ປະສົບການຂອງມະນຸດແມ່ນຄວາມເຂົ້າໃຈຂອງເຂົາ ແລະ ຄວາມຮູ້ທີ່ໄດ້ຮັບບົນພື້ນຖານການສະແດງອອກຂອງພຣະເຈົ້າກ່ຽວກັບການເປັນຢູ່ຂອງພຣະອົງ. ຄວາມເຂົ້າໃຈ ແລະ ຄວາມຮູ້ດັ່ງກ່າວແມ່ນເອີ້ນວ່າ ການເປັນຢູ່ຂອງມະນຸດ ແລະ ພື້ນຖານການສະແດງອອກຂອງພວກເຂົາແມ່ນອຸປະນິໄສ ແລະ ຄວາມສາມາດທີ່ເປັນທໍາມະຊາດຂອງມະນຸດ, ດ້ວຍເຫດນີ້ ພວກມັນຈຶ່ງຖືກເອີ້ນວ່າ ການເປັນຢູ່ຂອງມະນຸດ. ມະນຸດສາມາດສົນທະນາໃນສິ່ງທີ່ພວກເຂົາມີປະສົບການ ແລະ ເຫັນ. ບໍ່ມີຜູ້ໃດສາມາດສົນທະນາໃນສິ່ງທີ່ພວກເຂົາບໍ່ໄດ້ມີປະສົບການ, ບໍ່ໄດ້ເຫັນ ຫຼື ຄວາມຄິດຂອງພວກເຂົາບໍ່ສາມາດຢັ່ງເຖິງໄດ້, ນັ້ນກໍຄື ພວກເຂົາບໍ່ມີການເປັນຢູ່ເຫຼົ່ານັ້ນຢູ່ພາຍໃນພວກເຂົາ. ຖ້າສິ່ງທີ່ສະແດງອອກບໍ່ໄດ້ມາຈາກປະສົບການຂອງເຂົາ, ແລ້ວມັນກໍແມ່ນຈິນຕະນາການ ຫຼື ທິດສະດີຂອງເຂົາ. ເວົ້າງ່າຍໆກໍຄື ບໍ່ມີຄວາມເປັນຈິງໃດໆໃນຄໍາເວົ້າຂອງເຂົາເລີຍ. ຖ້າເຈົ້າບໍ່ເຄີຍຕິດຕໍ່ພົວພັນກັບສິ່ງທີ່ຢູ່ໃນສັງຄົມ ເຈົ້າຈະບໍ່ສາມາດສົນທະນາໄດ້ຢ່າງຊັດເຈນກ່ຽວກັບຄວາມສໍາພັນທີ່ຊັບຊ້ອນຂອງສັງຄົມ. ຖ້າເຈົ້າບໍ່ມີຄອບຄົວ ແຕ່ຄົນອື່ນກໍາລັງລົມກັນກ່ຽວກັບບັນຫາຄອບຄົວ, ເຈົ້າບໍ່ສາມາດເຂົ້າໃຈສິ່ງສ່ວນໃຫຍ່ທີ່ພວກເຂົາກໍາລັງລົມກັນ. ສະນັ້ນ ສິ່ງທີ່ມະນຸດສົນທະນາ ແລະ ພາລະກິດທີ່ເຂົາປະຕິບັດແມ່ນເປັນຕົວແທນໃຫ້ແກ່ການເປັນຢູ່ພາຍໃນຕົວເຂົາ. ຖ້າຜູ້ໃດຜູ້ໜຶ່ງສົນທະນາກ່ຽວກັບຄວາມເຂົ້າໃຈໃນການຂ້ຽນຕີ ແລະ ການພິພາກສາຂອງເຂົາ, ແຕ່ເຈົ້າ

ບໍ່ມີປະສົບການໃນສິ່ງນັ້ນ, ເຈົ້າບໍ່ກ້າປະຕິເສດຄວາມຮູ້ຂອງເຂົາ, ແຮງໄກທີ່ເຂົາຈະກ້າໝັ້ນໃຈເຖິງໜຶ່ງຮ້ອຍເປີເຊັນເລີຍ. ນີ້ກໍຍ້ອນວ່າ ການສົນທະນາຂອງພວກເຂົາແມ່ນສິ່ງທີ່ເຈົ້າບໍ່ເຄີຍມີປະສົບການຈັກເທື່ອ, ສິ່ງທີ່ເຈົ້າບໍ່ເຄີຍຮູ້ຈັກມາກ່ອນ ແລະ ຈິດໃຈຂອງເຈົ້າບໍ່ສາມາດຈິນຕະນາການມັນອອກ. ຈາກຄວາມຮູ້ຂອງພວກເຂົາ, ສິ່ງທີ່ເຈົ້າພຽງແຕ່ສາມາດຮັບເອົາແມ່ນເສັ້ນທາງເພື່ອນຳມາສູ່ການຂ້ຽນຕີ ແລະການພິພາກສາໃນອະນາຄົດ. ແຕ່ເສັ້ນທາງນີ້ສາມາດເປັນພຽງແຕ່ການເຂົ້າໃຈໂດຍອີງຕາມທິດສະດີ; ມັນບໍ່ສາມາດແທນທີ່ຄວາມເຂົ້າໃຈຂອງເຈົ້າເອງໄດ້, ແຮງໄກທີ່ຈະແທນທີ່ປະສົບການຂອງເຈົ້າ. ບາງຄັ້ງ ເຈົ້າຄິດວ່າສິ່ງທີ່ພວກເຂົາເວົ້າແມ່ນຖືກຕ້ອງພໍສົມຄວນ, ແຕ່ໃນປະສົບການຂອງເຈົ້າເອງ, ເຈົ້າພົບວ່າມັນໃຊ້ການບໍ່ໄດ້ໃນຫຼາຍໆສິ່ງ. ບາງຄັ້ງ ເຈົ້າຮູ້ສຶກວ່າ ບາງສິ່ງທີ່ເຈົ້າໄດ້ຍິນແມ່ນໃຊ້ການບໍ່ໄດ້ແທ້ໆ; ເຈົ້າເຊື່ອແນວຄິດກ່ຽວກັບສິ່ງນັ້ນໃນເວລາໃດໜຶ່ງ ແລະ ເຖິງແມ່ນເຈົ້າຍອມຮັບມັນ, ເຈົ້າກໍພຽງແຕ່ເຮັດດ້ວຍຄວາມບໍ່ເຕັມໃຈເທົ່ານັ້ນ. ແຕ່ໃນປະສົບການຂອງເຈົ້າເອງ, ຄວາມຮູ້ທີ່ໃຫ້ແນວຄິດກັບເຈົ້າກາຍມາເປັນວິທີການປະຕິບັດຂອງເຈົ້າ ແລະ ຍິ່ງເຈົ້າປະຕິບັດຫຼາຍພຽງໃດ, ເຈົ້າກໍຍິ່ງເຂົ້າໃຈຄຸນຄ່າທີ່ແທ້ຈິງ ແລະ ຄວາມໝາຍຂອງຄຳເວົ້າທີ່ເຈົ້າໄດ້ຍິນຫຼາຍພຽງນັ້ນ. ຫຼັງຈາກທີ່ເຈົ້າມີປະສົບການຂອງເຈົ້າເອງ, ແລ້ວເຈົ້າກໍສາມາດລົມກ່ຽວກັບຄວາມຮູ້ທີ່ເຈົ້າຄວນມີກ່ຽວກັບສິ່ງທີ່ເຈົ້າໄດ້ພະເຊີນ. ນອກຈາກນັ້ນ ເຈົ້າກໍ່ຍັງຈະສາມາດຈຳແນກລະຫວ່າງຄວາມຮູ້ຂອງຜູ້ໃດເປັນຈິງ ແລະ ໃຊ້ການໄດ້ ແລະ ຄວາມຮູ້ຂອງຜູ້ໃດທີ່ອີງຕາມທິດສະດີ ແລະ ບໍ່ມີຄ່າ. ສະນັ້ນ ບໍ່ວ່າຄວາມຮູ້ທີ່ເຈົ້າກຳລັງເວົ້າເຖິງຈະສອດຄ່ອງກັບຄວາມຈິງເປັນສ່ວນໃຫຍ່ ຫຼື ບໍ່ ແມ່ນຂຶ້ນກັບວ່າ ເຈົ້າມີປະສົບການທີ່ໃຊ້ການໄດ້ ຫຼື ບໍ່. ບ່ອນໃດທີ່ມີຄວາມຈິງໃນປະສົບການຂອງເຈົ້າ, ຄວາມຮູ້ຂອງເຈົ້າກໍຈະເປັນຄວາມຈິງ ແລະ ມີຄຸນຄ່າ. ຜ່ານປະສົບການຂອງເຈົ້າ, ເຈົ້າຍັງສາມາດໄດ້ຮັບການເບິ່ງອອກ ແລະ ຄວາມເຂົ້າໃຈ, ເຮັດໃຫ້ຄວາມຮູ້ຂອງເຈົ້າເລິກເຊິ່ງຂຶ້ນ ແລະ ເພີ່ມສະຕິປັນຍາຂອງເຈົ້າ ແລະ ສາມັນສຳນຶກກ່ຽວກັບວິທີທີ່ເຈົ້າຄວນປະພຶດຕົນເອງ. ຄວາມຮູ້ທີ່ຖືກສະແດງອອກໂດຍຄົນທີ່ບໍ່ມີຄວາມຈິງແມ່ນທິດສະດີ ບໍ່ວ່າມັນອາດສູງສົ່ງສໍ່າໃດກໍຕາມ. ຄົນປະເພດນີ້ອາດຈະສະຫຼາດຫຼາຍ ເມື່ອເວົ້າກ່ຽວກັບເລື່ອງຝ່າຍເນື້ອໜັງ ແຕ່ບໍ່ສາມາດແຍກແຍະເມື່ອເວົ້າກ່ຽວກັບເລື່ອງຝ່າຍວິນຍານ. ສິ່ງນີ້ເກີດຂຶ້ນກໍຍ້ອນວ່າຄົນດັ່ງກ່າວບໍ່ມີປະສົບການຫຍັງເລີຍກ່ຽວກັບເລື່ອງທັງໝົດໃນຝ່າຍວິນຍານ. ນີ້ແມ່ນຄົນທີ່ບໍ່ໄດ້ຮັບແສງສະຫວ່າງໃນເລື່ອງຝ່າຍວິນຍານ ແລະ ບໍ່ເຂົ້າໃຈວິນຍານ. ບໍ່ວ່າເຈົ້າຈະສະແດງຂອງຄວາມຮູ້ປະເພດໃດກໍຕາມ ຕາບໃດທີ່ມັນຄືການເປັນຢູ່ຂອງເຈົ້າ ແລ້ວມັນກໍເປັນປະສົບການສ່ວນຕົວຂອງເຈົ້າ, ຄວາມຮູ້ທີ່ແທ້ຈິງຂອງເຈົ້າ. ສິ່ງຄົນທີ່ເວົ້າພຽງແຕ່ທິດສະດີ ນັ້ນກໍຄື ຄົນທີ່ບໍ່ມີຄວາມຈິງ ຫຼື ຄວາມເປັນຈິງ ສົນທະນາກັນແມ່ນສາມາດຖືກເອີ້ນໄດ້ວ່າການເປັນຢູ່ຂອງພວກເຂົາ, ຍ້ອນພວກເຂົາມາເຖິງທິດສະດີຂອງພວກເຂົາພຽງແຕ່ຜ່ານການຕຶກຕອງຢ່າງເລິກເຊິ່ງ ແລະ ຍ້ອນຜົນທີ່ຂອງການໄຕ່ຕອງຢ່າງເລິກເຊິ່ງຂອງພວກເຂົາ, ແຕ່ມັນເປັນພຽງທິດສະດີເທົ່ານັ້ນ, ບໍ່ແມ່ນຫຍັງນອກຈາກຈິນຕະນາການ! ປະສົບການຂອງຄົນທຸກປະເພດເປັນຕົວແທນໃຫ້ແກ່ສິ່ງທີ່ຢູ່ພາຍໃນພວກເຂົາ. ຄົນທີ່ບໍ່ມີປະສົບການຝ່າຍວິນຍານບໍ່ສາມາດເວົ້າກ່ຽວກັບຄວາມຮູ້ແຫ່ງຄວາມຈິງ ຫຼື ຄວາມຮູ້ທີ່ຖືກຕ້ອງກ່ຽວກັບເລື່ອງຝ່າຍວິນຍານຕ່າງໆ.

ສິ່ງທີ່ມະນຸດສະແດງອອກແມ່ນສິ່ງທີ່ພວກເຂົາເປັນຢູ່ພາຍໃນ, ນີ້ຄືສິ່ງທີ່ແນ່ນອນ. ຖ້າຄົນໜຶ່ງປາຖະໜາທີ່ຈະມີຄວາມຮູ້ກ່ຽວກັບສິ່ງຕ່າງໆໃນຝ່າຍວິນຍານ ແລະ ຄວາມຮູ້ກ່ຽວກັບຄວາມຈິງ, ຄົນໆນັ້ນຕ້ອງມີປະສົບການທີ່ແທ້ຈິງ. ຖ້າເຈົ້າບໍ່ສາມາດເວົ້າກ່ຽວກັບສາມັນສຳນຶກໃນຊີວິດຂອງມະນຸດຢ່າງຊັດເຈນ, ແລ້ວມັນຈະບໍ່ແຮງໄກບໍທີ່ເຈົ້າຈະສາມາດເວົ້າກ່ຽວກັບສິ່ງຕ່າງໆໃນຝ່າຍວິນຍານ? ຄົນທີ່ສາມາດນຳພາຄຣິດສະຕະຈັກ, ສະໜອງຊີວິດໃຫ້ກັບຜູ້ຄົນ ແລະ ເປັນອັກຄະສາວົກໃຫ້ກັບຜູ້ຄົນ ຕ້ອງມີປະສົບການທີ່ແທ້ຈິງ; ພວກເຂົາຕ້ອງມີຄວາມເຂົ້າໃຈຢ່າງຖືກຕ້ອງກ່ຽວກັບສິ່ງຕ່າງໆໃນຝ່າຍວິນຍານ ແລະ ການເຂົ້າໃຈທີ່ຖືກຕ້ອງ ແລະ ປະສົບການແຫ່ງຄວາມຈິງ. ມີພຽງແຕ່ຄົນປະເພດດັ່ງກ່າວນີ້ເທົ່ານັ້ນ ຈຶ່ງມີຄຸນສົມບັດໃນການເປັນຄົນປະຕິບັດພາລະກິດ ຫຼື ອັກຄະສາວົກທີ່ນຳພາຄຣິດສະຕະຈັກ. ຖ້າບໍ່ດັ່ງນັ້ນພວກເຂົາພຽງແຕ່ສາມາດຕິດຕາມໃນຖານະຄົນທີ່ຕ້ອຍຕໍ່າສຸດ ແລະ ບໍ່ສາມາດນຳພາໄດ້, ແຮງໄກທີ່ຈະເປັນອັກຄະສາວົກທີ່ສາມາດສະໜອງຊີວິດໃຫ້ກັບຜູ້ຄົນເລີຍ. ນີ້ກໍຍ້ອນວ່າ ໜ້າທີ່ຂອງອັກຄະສາວົກບໍ່ແມ່ນການແລ່ນໜີ ຫຼື ການຕໍ່ສູ້; ມັນແມ່ນເພື່ອປະຕິບັດພາລະກິດແຫ່ງລ້ຽງດູຊີວິດ ແລະ ນຳພາຄົນອື່ນໃຫ້ປ່ຽນແປງອຸປະນິໄສຂອງພວກເຂົາ. ຄົນທີ່ປະຕິບັດໜ້າທີ່ນີ້ແມ່ນຖືກຝາກຝັງໃຫ້ແບກຮັບໜ້າທີ່ຮັບຜິດຊອບທີ່ໜັກໜ່ວງ, ຄວາມຮັບຜິດຊອບທີ່ບໍ່ແມ່ນຜູ້ໃດກໍຕາມຈະສາມາດແບກໄດ້. ພາລະກິດປະເພດນີ້ພຽງແຕ່ສາມາດປະຕິບັດໄດ້ໂດຍຄົນທີ່ການເປັນຢູ່ໃນຊີວິດ ນັ້ນກໍຄື ຄົນທີ່ມີປະສົບການແຫ່ງຄວາມຈິງ. ມັນບໍ່ສາມາດຖືກປະຕິບັດໂດຍຜູ້ໃດກໍຕາມທີ່ສາມາດຍອມຈຳນົນໄດ້, ສາມາດແລ່ນໜີ ຫຼື ເຕັມໃຈທີ່ຈະເສຍສະຫຼະຕົນເອງ; ຄົນທີ່ບໍ່ມີປະສົບການແຫ່ງຄວາມຈິງ, ຄົນທີ່ບໍ່ໄດ້ຖືກລິຮານ ຫຼື ພິພາກສາ ບໍ່ສາມາດປະຕິບັດພາລະກິດປະເພດນີ້ໄດ້. ຄົນທີ່ບໍ່ມີປະສົບການ, ຄົນທີ່ປາສະຈາກຄວາມເປັນຈິງ ແມ່ນບໍ່ສາມາດເຫັນຄວາມເປັນຈິງຢ່າງຊັດເຈນ ຍ້ອນພວກເຂົາເອງບໍ່ມີການເປັນຢູ່ປະເພດນີ້. ດັ່ງນັ້ນ ຄົນປະເພດນີ້ບໍ່ພຽງແຕ່ບໍ່ສາມາດປະຕິບັດພາລະກິດແຫ່ງການເປັນຜູ້ນຳໄດ້, ແຕ່ຖ້າພວກເຂົາຍັງຄົງບໍ່ມີຄວາມຈິງເປັນເວລາດົນນານ ພວກເຂົາຈະຖືກໂຍນອອກ. ຄວາມເຂົ້າໃຈທີ່ເຈົ້າກ່າວສາມາດພິສູດໃຫ້ເຫັນຄວາມລຳບາກທີ່ເຈົ້າຜະເຊີນໃນຊີວິດ, ເຫັນສິ່ງທີ່ເຈົ້າຖືກຂ້ຽນຕີ ແລະ ບັນຫາທີ່ເຮັດໃຫ້ເຈົ້າຖືກພິພາກສາ. ສິ່ງນີ້ເປັນຈິງໃນການທົດລອງເຊັ່ນດຽວກັນ: ບ່ອນທີ່ເຮັດໃຫ້ຄົນໃດໜຶ່ງບໍລິສຸດ, ບ່ອນທີ່ເຮັດໃຫ້ຄົນໃດໜຶ່ງອ່ອນແອ, ສິ່ງເຫຼົ່ານີ້ແມ່ນບ່ອນທີ່ເຮັດໃຫ້ຄົນໃດໜຶ່ງມີປະສົບການ, ສິ່ງທີ່ເຮັດໃຫ້ຄົນໃດໜຶ່ງມີຫົນທາງ. ຕົວຢ່າງ ຖ້າຜູ້ໃດຜູ້ໜຶ່ງຜິດຫວັງກັບຊີວິດແຕ່ງດອງ, ພວກເຂົາກໍມັກສົນທະນາກັນວ່າ “ຂອບຄຸນພຣະເຈົ້າ, ສັນລະເສີນພຣະອົງ, ຂ້ານ້ອຍຕ້ອງເຮັດເປັນທີ່ພໍໃຈພຣະອົງ ແລະ ຖວາຍຊີວິດທັງໝົດຂອງຂ້ານ້ອຍ ແລະ ຂ້ານ້ອຍຕ້ອງ ມອບການແຕ່ງດອງຂອງຂ້ານ້ອຍໄວ້ໃນມືຂອງພຣະອົງຢ່າງສິ້ນເຊີງ. ຂ້ານ້ອຍເຕັມໃຈທີ່ຈະປະຕິຍານຊີວິດທັງໝົດຂອງຂ້ານ້ອຍໃຫ້ແກ່ພຣະອົງ”. ທຸກສິ່ງທີ່ຢູ່ໃນມະນຸດສາມາດສະແດງເຖິງສິ່ງທີ່ເຂົາເປັນຜ່ານການສົນທະນາ. ອັດຕາຄວາມໄວຂອງຄຳເວົ້າຂອງຄົນ, ບໍ່ວ່າພວກເຂົາຈະເວົ້າດັງ ຫຼື ງຽບ, ບັນຫາດັ່ງກ່າວທີ່ບໍ່ແມ່ນເລື່ອງຂອງປະສົບການ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບສິ່ງທີ່ພວກເຂົາມີ ແລະ ເປັນ. ສິ່ງເຫຼົ່ານີ້ພຽງແຕ່ສາມາດບອກໄດ້ວ່າ ລັກສະນະຂອງພວກເຂົາດີ ຫຼື ຊົ່ວ ຫຼື ທຳມະຊາດຂອງພວກເຂົາດີ ຫຼື ຊົ່ວ, ແຕ່ພວກມັນບໍ່ສາມາດ

ທຽບເທົ່າກັບວ່າຜູ້ໃດຜູ້ໜຶ່ງມີປະສົບການ ຫຼື ບໍ່. ຄວາມສາມາດທີ່ຈະສະແດງເຖິງຄົນໃດໜຶ່ງໃນເວລາທີ່ກຳລັງເວົ້າ ຫຼື ທັກສະ ຫຼື ຄວາມໄວຂອງຄຳເວົ້າ, ແມ່ນເປັນພຽງເລື່ອງການປະຕິບັດ ແລະ ບໍ່ສາມາດທົດແທນປະສົບການຂອງຜູ້ໃດຜູ້ໜຶ່ງ. ເມື່ອເຈົ້າເວົ້າກ່ຽວກັບປະສົບການສ່ວນຕົວຂອງເຈົ້າ, ເຈົ້າສົນທະນາໃນສິ່ງທີ່ເຈົ້າໃຫ້ຄວາມສຳຄັນ ແລະ ທຸກສິ່ງທີ່ຢູ່ພາຍໃນເຈົ້າ. ຄຳເວົ້າຂອງເຮົາສະແດງເຖິງການເປັນຢູ່ຂອງເຮົາ, ແຕ່ສິ່ງທີ່ເຮົາເວົ້າແມ່ນນອກເໜືອການຢັ່ງເຖິງຂອງມະນຸດ. ສິ່ງທີ່ເຮົາເວົ້າບໍ່ແມ່ນສິ່ງທີ່ມະນຸດຜະເຊີນ ແລະ ມັນບໍ່ແມ່ນສິ່ງທີ່ມະນຸດສາມາດເຫັນໄດ້; ມັນບໍ່ແມ່ນສິ່ງທີ່ມະນຸດສາມາດຈັບຕ້ອງໄດ້ເຊັ່ນກັນ, ແຕ່ມັນເປັນສິ່ງທີ່ເຮົາເປັນ. ບາງຄົນພຽງແຕ່ຮັບຮູ້ວ່າ ສິ່ງທີ່ເຮົາສົນທະນາແມ່ນສິ່ງທີ່ເຮົາໄດ້ຜະເຊີນ, ແຕ່ພວກເຂົາບໍ່ເຂົ້າໃຈວ່າ ມັນແມ່ນການສະແດງອອກໂດຍກົງຂອງພຣະວິນຍານ. ແນ່ນອນ, ສິ່ງທີ່ເຮົາເວົ້າແມ່ນສິ່ງທີ່ເຮົາໄດ້ຜະເຊີນ. ມັນແມ່ນເຮົາທີ່ເປັນຜູ້ປະຕິບັດພາລະກິດການຄຸ້ມຄອງເປັນເວລາຫົກພັນປີ. ເຮົາໄດ້ຜະເຊີນກັບທຸກສິ່ງຈາກການເລີ່ມຕົ້ນຂອງການສ້າງມະນຸດຊາດຈົນເຖິງປັດຈຸບັນ; ເຮົາຈະບໍ່ສາມາດສົນທະນາກ່ຽວກັບສິ່ງນັ້ນໄດ້ແນວໃດ? ເມື່ອເວົ້າເລື່ອງທຳມະຊາດຂອງມະນຸດ ເຮົາໄດ້ເຫັນຢ່າງຊັດເຈນ; ເຮົາສັງເກດມັນມາເປັນເວລາດົນນານແລ້ວ; ເຮົາຈະບໍ່ສາມາດເວົ້າກ່ຽວກັບສິ່ງນັ້ນຢ່າງຊັດເຈນໄດ້ແນວໃດ? ຍ້ອນເຮົາໄດ້ເຫັນທາດແທ້ຂອງມະນຸດຢ່າງຊັດເຈນ, ເຮົາມີຄຸນສົມບັດທີ່ຈະຂ້ຽນຕີມະນຸດ ແລະ ພິພາກສາມະນຸດ, ຍ້ອນວ່າມະນຸດທຸກຄົນມາຈາກເຮົາ ແຕ່ຖືກເຮັດໃຫ້ເສື່ອມຊາມໂດຍຊາຕານ. ແນ່ນອນ ເຮົາຍັງມີຄຸນສົມບັດໃນການປະເມີນພາລະກິດທີ່ເຮົາໄດ້ປະຕິບັດ. ເຖິງແມ່ນພາລະກິດນີ້ບໍ່ແມ່ນຖືກປະຕິບັດໂດຍເນື້ອໜັງຂອງເຮົາ, ມັນແມ່ນການສະແດງອອກໂດຍກົງຂອງພຣະວິນຍານ ແລະ ນີ້ແມ່ນສິ່ງທີ່ເຮົາມີ ແລະ ສິ່ງທີ່ເຮົາເປັນ. ດ້ວຍເຫດນັ້ນ ເຮົາມີຄຸນສົມບັດທີ່ຈະສະແດງອອກເຖິງສິ່ງນີ້ ແລະ ປະຕິບັດພາລະກິດທີ່ເຮົາຄວນເຮັດ. ສິ່ງທີ່ຜູ້ຄົນເວົ້າແມ່ນສິ່ງທີ່ພວກເຂົາຜະເຊີນ. ມັນແມ່ນສິ່ງທີ່ພວກເຂົາເຫັນ, ສິ່ງທີ່ຈິດໃຈຂອງພວກເຂົາສາມາດຢັ່ງເຖິງ ແລະ ສິ່ງທີ່ຄວາມຮູ້ສຶກຂອງພວກເຂົາສາມາດກວດຈັບໄດ້. ນັ້ນຄືສິ່ງທີ່ພວກເຂົາສາມາດສົນທະນາ. ພຣະທຳທີ່ກ່າວໂດຍເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າແມ່ນການສະແດງອອກໂດຍກົງຂອງພຣະວິນຍານ ແລະ ພວກມັນສະແດງເຖິງພາລະກິດທີ່ພຣະວິນຍານປະຕິບັດ ເຊິ່ງເນື້ອໜັງບໍ່ໄດ້ຜະເຊີນ ຫຼື ເຫັນໃນສິ່ງນັ້ນ, ແຕ່ພຣະອົງຍັງສະແດງເຖິງການເປັນຢູ່ຂອງພຣະອົງ, ຍ້ອນວ່າ ແກ່ນແທ້ຂອງເນື້ອໜັງແມ່ນພຣະວິນຍານ ແລະ ພຣະອົງສະແດງເຖິງພາລະກິດຂອງພຣະວິນຍານ. ມັນຄືພາລະກິດທີ່ຖືກເຮັດສຳເລັດໂດຍພຣະວິນຍານ ເຖິງແມ່ນມັນຢູ່ນອກເໜືອການຢັ່ງເຖິງຂອງເນື້ອໜັງ. ຫຼັງຈາກການບັງເກີດເປັນມະນຸດ ຜ່ານການສະແດງອອກຂອງເນື້ອໜັງ ພຣະອົງເຮັດໃຫ້ຜູ້ຄົນສາມາດຮູ້ຈັກເຖິງການເປັນຢູ່ຂອງພຣະເຈົ້າ ແລະ ເຮັດໃຫ້ຜູ້ຄົນເຫັນອຸປະນິໄສຂອງພຣະເຈົ້າ ແລະ ພາລະກິດທີ່ພຣະອົງໄດ້ເຮັດສຳເລັດ. ພາລະກິດຂອງມະນຸດເຮັດໃຫ້ຜູ້ຄົນມີຄວາມຊັດເຈນຫຼາຍຂຶ້ນກ່ຽວກັບສິ່ງທີ່ພວກເຂົາຄວນເຂົ້າສູ່ ແລະ ສິ່ງທີ່ພວກເຂົາຄວນເຂົ້າໃຈ; ມັນກ່ຽວຂ້ອງກັບການນຳຜູ້ຄົນສູ່ການເຂົ້າໃຈ ແລະ ການຜະເຊີນກັບຄວາມຈິງ. ພາລະກິດຂອງມະນຸດຄືການສະໜັບສະໜູນຜູ້ຄົນ; ພາລະກິດຂອງພຣະເຈົ້າແມ່ນການເປີດເສັ້ນທາງໃໝ່ ແລະ ເປີດຍຸກໃໝ່ສຳລັບມະນຸດຊາດ ແລະ ການເປີດເຜີຍໃຫ້ຜູ້ຄົນເຫັນ

ເຖິງສິ່ງທີ່ມະນຸດບໍ່ເຄີຍຮູ້, ເຮັດໃຫ້ພວກເຂົາສາມາດຮູ້ຈັກອຸປະນິໄສຂອງພຣະອົງ. ພາລະກິດຂອງພຣະເຈົ້າແມ່ນເພື່ອນຳພາມະນຸດຊາດ.

ພາລະກິດທັງໝົດຂອງພຣະວິນຍານບໍລິສຸດແມ່ນຖືກປະຕິບັດເພື່ອເປັນປະໂຫຍດແກ່ຜູ້ຄົນ; ມັນກ່ຽວກັບການສັ່ງສອນຜູ້ຄົນ; ບໍ່ມີພາລະກິດໃດທີ່ບໍ່ໃຫ້ຜົນປະໂຫຍດກັບຜູ້ຄົນ. ບໍ່ວ່າຄວາມຈິງຈະເລິກ ຫຼື ຕື້ນ ແລະ ບໍ່ວ່າຄວາມສາມາດຂອງຄົນທີ່ຍອມຮັບຄວາມຈິງຈະເປັນແນວໃດ, ມັນກໍໃຫ້ຜົນປະໂຫຍດກັບຜູ້ຄົນ. ແຕ່ພາລະກິດຂອງພຣະວິນຍານບໍລິສຸດບໍ່ສາມາດເຮັດໃຫ້ສຳເລັດໂດຍກົງ; ມັນຕ້ອງຖືກສະແດງອອກຜ່ານຜູ້ຄົນທີ່ຮ່ວມມືກັບພຣະອົງ. ມີພຽງແຕ່ວິທີນີ້ເທົ່ານັ້ນ ຜົນຂອງພາລະກິດຂອງພຣະວິນຍານບໍລິສຸດຈຶ່ງສາມາດຖືກຮັບເອົາໄດ້. ແນ່ນອນ ເມື່ອມັນເປັນພຣະວິນຍານບໍລິສຸດປະຕິບັດພາລະກິດໂດຍກົງ, ມັນບໍ່ໄດ້ຮັບການເຈືອປົນເລີຍ; ແຕ່ເມື່ອພຣະວິນຍານບໍລິສຸດປະຕິບັດພາລະກິດຜ່ານມະນຸດ, ມັນຈຶ່ງໄດ້ຮັບການເຈືອປົນຫຼາຍ ແລະ ບໍ່ແມ່ນພາລະກິດເດີມຂອງພຣະວິນຍານບໍລິສຸດ. ດ້ວຍວິທີນີ້ ຄວາມຈິງຈຶ່ງປ່ຽນແປງໃນລະດັບທີ່ແຕກຕ່າງ. ຜູ້ຕິດຕາມບໍ່ໄດ້ຮັບເຈດຕະນາເດີມຂອງພຣະວິນຍານບໍລິສຸດ, ແຕ່ເປັນການປະສົມກັນລະຫວ່າງພາລະກິດຂອງພຣະວິນຍານບໍລິສຸດ ແລະ ປະສົບການ ແລະ ຄວາມຮູ້ຂອງມະນຸດ. ພາກສ່ວນຂອງສິ່ງທີ່ຜູ້ຕິດຕາມຮັບທີ່ເປັນພາລະກິດຂອງພຣະວິນຍານບໍລິສຸດຖືກຕ້ອງ, ໃນຂະນະທີ່ປະສົບການ ແລະ ຄວາມຮູ້ຂອງມະນຸດທີ່ໄດ້ຮັບແມ່ນມີຄວາມຫຼາກຫຼາຍ ຍ້ອນຄົນປະຕິບັດພາລະກິດແຕກຕ່າງກັນ. ຄົນປະຕິບັດພາລະກິດທີ່ມີແສງສະຫວ່າງ ແລະ ການນຳພາຂອງພຣະວິນຍານບໍລິສຸດຈະສືບຕໍ່ມີປະສົບການ ໂດຍອີງຕາມແສງສະຫວ່າງ ແລະ ການນຳພານີ້. ພາຍໃນປະສົບການເຫຼົ່ານີ້ແມ່ນປະສົມມີຈິດໃຈ ແລະ ປະສົບການຂອງມະນຸດ, ພ້ອມທັງການເປັນຢູ່ຂອງມະນຸດ ແລະ ຫຼັງຈາກນັ້ນ ພວກເຂົາຈຶ່ງໄດ້ຮັບຄວາມຮູ້ ຫຼື ຄວາມເຂົ້າໃຈທີ່ພວກເຂົາຄວນມີ. ສິ່ງນີ້ແມ່ນວິທີການປະຕິບັດຂອງມະນຸດຫຼັງຈາກທີ່ໄດ້ພະເຊີນກັບຄວາມຈິງ. ວິທີການປະຕິບັດນີ້ບໍ່ຄືກັນສະເໝີໄປ ຍ້ອນຜູ້ຄົນມີປະສົບການທີ່ແຕກຕ່າງກັນ ແລະ ສິ່ງທີ່ຜູ້ຄົນສຳຜັດກໍແຕກຕ່າງກັນ. ດ້ວຍວິທີນີ້ ແສງສະຫວ່າງດຽວກັນຂອງພຣະວິນຍານບໍລິສຸດກໍເກີດຜົນໃນຄວາມຮູ້ ແລະ ການປະຕິບັດທີ່ແຕກຕ່າງກັນ, ຍ້ອນຄົນທີ່ຮັບແສງສະຫວ່າງແມ່ນແຕກຕ່າງກັນ. ບາງຄົນເຮັດຜິດພາດເລັກນ້ອຍໃນລະຫວ່າງການປະຕິບັດ ໃນຂະນະທີ່ບາງຄົນເຮັດຜິດພາດຢ່າງຮ້າຍແຮງ ແລະ ບາງຄົນບໍ່ໄດ້ສ້າງຫຍັງເລີຍນອກຈາກຄວາມຜິດພາດ. ນີ້ກໍຍ້ອນວ່າ ຜູ້ຄົນແຕກຕ່າງກັນໃນຄວາມສາມາດທີ່ຈະເຂົ້າໃຈຂອງພວກເຂົາ ແລະ ຍັງເປັນຍ້ອນຄວາມສາມາດໂດຍທຳມະຊາດຂອງພວກເຮົາແຕກຕ່າງເຊັ່ນກັນ. ບາງຄົນມີຄວາມເຂົ້າໃຈບາງຢ່າງຫຼັງຈາກທີ່ໄດ້ຍິນຂໍ້ຄວາມ ແລະ ບາງຄົນມີຄວາມເຂົ້າໃຈອີກຢ່າງ ຫຼັງຈາກທີ່ໄດ້ຍິນຄວາມຈິງ. ບາງຄົນອອກນອກທາງເລັກນ້ອຍ, ໃນຂະນະທີ່ບາງຄົນບໍ່ເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງຄວາມຈິງເລີຍ. ດ້ວຍເຫດນັ້ນ ຄວາມເຂົ້າໃຈຂອງຄົນໆໜຶ່ງຈະກຳນົດວິທີທີ່ຄົນໆນັ້ນຈະນຳພາຄົນອື່ນ; ສິ່ງນີ້ເປັນຈິງແນ່ນອນ, ຍ້ອນພາລະກິດຂອງຄົນໆໜຶ່ງແມ່ນເປັນພຽງການສະແດງອອກຂອງການເປັນຢູ່ຂອງຄົນໆນັ້ນເທົ່ານັ້ນ. ຜູ້ຄົນທີ່ຖືກນຳພາໂດຍຄົນທີ່ມີຄວາມເຂົ້າໃຈຄວາມຈິງຢ່າງຖືກຕ້ອງຈະມີຄວາມເຂົ້າໃຈຢ່າງຖືກຕ້ອງກ່ຽວກັບຄວາມຈິງເຊັ່ນກັນ. ເຖິງແມ່ນ ມີຄົນທີ່ມີຂໍ້ຜິດພາດ

ໃນຄວາມເຂົ້າໃຈກໍມີຈຳນວນໜ້ອຍ ແລະ ບໍ່ແມ່ນໝົດທຸກຄົນທີ່ຈະມີຂໍ້ຜິດພາດ. ຖ້າຄົນໆໜຶ່ງມີຂໍ້ຜິດພາດໃນການທີ່ເຂົາເຂົ້າໃຈຄວາມຈິງ, ຄົນທີ່ຕິດຕາມເຂົາກໍຈະຜິດໂດຍບໍ່ຕ້ອງສົງໄສເຊັ່ນກັນ ແລະ ຄົນເຫຼົ່ານີ້ຈະຜິດໃນຄຳເວົ້າທຸກປະການ. ລະດັບຄວາມເຂົ້າໃຈທີ່ຜູ້ຕິດຕາມເຂົ້າໃຈຄວາມຈິງແມ່ນຂຶ້ນຢູ່ກັບຄົນປະຕິບັດພາລະກິດເປັນສ່ວນໃຫຍ່. ແນ່ນອນ ຄວາມຈິງຈາກພຣະເຈົ້າເປັນສິ່ງທີ່ຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດ ແລະ ແນ່ນອນທີ່ສຸດ. ເຖິງຢ່າງໃດກໍຕາມ ຄົນປະຕິບັດພາລະກິດແມ່ນບໍ່ຖືກຕ້ອງທັງໝົດ ແລະ ບໍ່ສາມາດເວົ້າໄດ້ວ່າ ສາມາດເຊື່ອຖືໄດ້ທັງໝົດ. ຖ້າຄົນປະຕິບັດພາລະກິດມີວິທີການປະຕິບັດຄວາມຈິງ ທີ່ມີຄວາມເປັນຈິງຫຼາຍ ແລ້ວຜູ້ຕິດຕາມກໍຈະມີວິທີການປະຕິບັດເຊັ່ນດຽວກັນ. ຖ້າຄົນປະຕິບັດພາລະກິດບໍ່ມີວິທີການປະຕິບັດຄວາມຈິງ ມີແຕ່ທິດສະດີເທົ່ານັ້ນ, ແລ້ວຜູ້ຕິດຕາມຈະບໍ່ມີຄວາມເປັນຈິງໃດໆເລີຍ. ຄວາມສາມາດ ແລະ ທຳມະຊາດຂອງຜູ້ຕິດຕາມແມ່ນຖືກກຳນົດໂດຍການເກີດ ແລະ ບໍ່ກ່ຽວເນື່ອງກັບຄົນປະຕິບັດພາລະກິດ. ແຕ່ຂອບເຂດທີ່ຜູ້ຕິດຕາມເຂົ້າໃຈຄວາມຈິງ ແລະ ຮູ້ຈັກພຣະເຈົ້າແມ່ນຂຶ້ນຢູ່ກັບຄົນປະຕິບັດພາລະກິດ (ສິ່ງນີ້ເປັນຈິງສຳລັບບາງຄົນເທົ່ານັ້ນ). ບໍ່ວ່າຜູ້ຄົນປະຕິບັດພາລະກິດຈະເປັນແນວໃດກໍຕາມ, ຜູ້ຕິດຕາມທີ່ເຂົານຳພາກໍຈະເປັນແນວນັ້ນ. ສິ່ງທີ່ຄົນປະຕິບັດພາລະກິດສະແດງອອກແມ່ນການເປັນຢູ່ຂອງເຂົາເອງ, ປາສະຈາກຂໍ້ຈຳກັດ. ຄວາມຮຽກຮ້ອງທີ່ເຂົາມີຕໍ່ຜູ້ທີ່ຕິດຕາມເຂົາແມ່ນສິ່ງທີ່ເຂົາເອງເຕັມໃຈເຮັດໃຫ້ບັນລຸ ຫຼື ສາມາດບັນລຸ. ຄົນປະຕິບັດພາລະກິດສ່ວນໃຫຍ່ໃຊ້ສິ່ງທີ່ພວກເຂົາເຮັດເປັນພື້ນໃນການຮຽກຮ້ອງຈາກຜູ້ຕິດຕາມຂອງພວກເຂົາ ໂດຍບໍ່ຄຳນຶງວ່າມີຫຼາຍສິ່ງທີ່ຜູ້ຕິດຕາມຂອງພວກເຂົາບໍ່ສາມາດບັນລຸໄດ້ເລີຍ ແລະ ສິ່ງທີ່ຄົນໆໜຶ່ງບໍ່ສາມາດບັນລຸໄດ້ກາຍມາເປັນອຸປະສັກໃນທາງເຂົ້າຂອງຄົນໆນັ້ນ.

ມີການຄາດເຄື່ອນໜ້ອຍລົງໃນພາລະກິດຂອງຄົນທີ່ໄດ້ຜ່ານການລິຮານ, ການຖືກຈັດການ, ການພິພາກສາ ແລະ ການຂ້ຽນຕີ ແລະ ການສະແດງອອກຂອງພາລະກິດຂອງພວກເຂົາກໍຖືກຕ້ອງຫຼາຍກວ່າ. ຄົນທີ່ອາໄສຄວາມເປັນທຳມະຊາດຂອງພວກເຂົາເພື່ອປະຕິບັດພາລະກິດແມ່ນເຮັດຜິດພາດຮ້າຍແຮງພໍສົມຄວນ. ພາລະກິດຂອງຜູ້ຄົນທີ່ບໍ່ໄດ້ຖືກເຮັດໃຫ້ສົມບູນສະແດງຄວາມເປັນທຳມະຊາດຂອງພວກເຂົາເອງຫຼາຍເກີນໄປ ເຊິ່ງກໍ່ໃຫ້ເກີດອຸປະສັກໃຫຍ່ຫຼວງຕໍ່ພາລະກິດຂອງພຣະວິນຍານບໍລິສຸດ. ບໍ່ວ່າຄວາມສາມາດຂອງບຸກຄົນຈະດີສໍ່າໃດກໍຕາມ, ພວກເຂົາກໍຕ້ອງໄດ້ຜ່ານກັບການລິຮານ, ການຖືກຈັດການ ແລະ ການພິພາກສາກ່ອນທີ່ພວກເຂົາຈະສາມາດປະຕິບັດພາລະກິດແຫ່ງການຝາກຝັງຂອງພຣະເຈົ້າໄດ້. ຖ້າພວກເຂົາຍັງບໍ່ໄດ້ຜ່ານການພິພາກສາດັ່ງກ່າວ, ບໍ່ວ່າພວກເຂົາຈະເຮັດໄດ້ດີພຽງໃດ ພາລະກິດຂອງພວກເຂົາກໍບໍ່ສາມາດສອດຄ່ອງກັບຫຼັກການແຫ່ງຄວາມຈິງໄດ້ ແລະ ເປັນຜົນຂອງຄວາມເປັນທຳມະຊາດຂອງພວກເຂົາເອງ ແລະ ຄວາມດີຂອງມະນຸດຢູ່ສະເໝີ. ພາລະກິດຂອງຄົນທີ່ໄດ້ຜ່ານການລິຮານ, ການຖືກຈັດການ ແລະ ການພິພາກສາແມ່ນຖືກຕ້ອງຫຼາຍກວ່າພາລະກິດຂອງຄົນທີ່ບໍ່ເຄີຍຖືກລິຮານ, ຈັດການ ແລະ ພິພາກສາ. ຄົນທີ່ບໍ່ໄດ້ຜ່ານການພິພາກສາບໍ່ສະແດງອອກເຖິງຫຍັງນອກຈາກເນື້ອໜັງ ແລະ ຄວາມຄິດຂອງມະນຸດ ທີ່ເຈືອປົນກັບຄວາມສະຫຼາດ ແລະ ຄວາມສາມາດຕັ້ງແຕ່ເກີດຂອງມະນຸດ. ນີ້ບໍ່ແມ່ນການສະແດງອອກຢ່າງຖືກຕ້ອງຂອງມະນຸດກ່ຽວກັບພາລະກິດ

ຂອງພຣະເຈົ້າ. ຄົນທີ່ຕິດຕາມຜູ້ຄົນດັ່ງກ່າວຖືກນຳມາຢູ່ຕໍ່ໜ້າພວກເຂົາໂດຍຄວາມສາມາດມີມາຕັ້ງແຕ່ເກີດຂອງພວກເຂົາ. ຍ້ອນພວກເຂົາສະແດງອອກເຖິງຄວາມເຂົ້າໃຈ ແລະ ປະສົບການຫຼາຍຢ່າງເກີນໄປຂອງມະນຸດ, ເຊິ່ງເກືອບແຍກອອກຈາກເຈດຕະນາເດີມຂອງພຣະເຈົ້າ ແລະ ຫັນເຫຈາກສິ່ງນັ້ນຫຼາຍເກີນໄປ, ພາລະກິດຂອງຄົນປະເພດນີ້ຈຶ່ງບໍ່ສາມາດນຳຜູ້ຄົນມາຢູ່ຕໍ່ໜ້າພຣະເຈົ້າໄດ້, ແຕ່ກົງກັນຂ້າມແມ່ນນຳພວກເຂົາມາຢູ່ຕໍ່ໜ້າມະນຸດ. ສະນັ້ນ ຄົນທີ່ບໍ່ໄດ້ຜ່ານການພິພາກສາ ແລະ ການຂ້ຽນຕີແມ່ນບໍ່ມີຄຸນສົມບັດໃນການປະຕິບັດພາລະກິດແຫ່ງການຝາກຝັງຂອງພຣະເຈົ້າ. ພາລະກິດຂອງຄົນປະຕິບັດພາລະກິດທີ່ມີຄຸນສົມບັດສາມາດນຳຜູ້ຄົນເຂົ້າສູ່ຫົນທາງທີ່ຖືກຕ້ອງ ແລະ ມອບທາງເຂົ້າທີ່ຍິ່ງໃຫຍ່ຂຶ້ນສູ່ຄວາມຈິງໃຫ້ແກ່ພວກເຂົາ. ພາລະກິດຂອງພຣະເຈົ້າສາມາດນຳຜູ້ຄົນມາຢູ່ຕໍ່ໜ້າພຣະເຈົ້າ. ນອກຈາກນັ້ນ ພາລະກິດທີ່ເຂົາປະຕິບັດສາມາດປ່ຽນແປງໄປຈາກບຸກຄົນສູ່ບຸກຄົນ ແລະ ບໍ່ຖືກຜູກມັດໂດຍກົດລະບຽບ, ເຮັດໃຫ້ຜູ້ຄົນຖືກປົດປ່ອຍ ແລະ ຮັບອິດສະຫຼະພາບ ແລະ ຄວາມສາມາດໃນການເຕີບໃຫຍ່ໃນຊີວິດເທື່ອລະໜ້ອຍ ແລະ ການມີທາງເຂົ້າທີ່ເລິກເຊິ່ງຫຼາຍຂຶ້ນໃນຄວາມຈິງເທື່ອລະໜ້ອຍ. ພາລະກິດຂອງຄົນປະຕິບັດພາລະກິດທີ່ບໍ່ມີຄຸນສົມບັດແມ່ນບໍ່ເປັນໄປຕາມຄາດຫວັງຫຼາຍ. ພາລະກິດຂອງເຂົາໂງ່ຈ້າ. ເຂົາພຽງແຕ່ສາມາດນຳຜູ້ຄົນມາສູ່ກົດລະບຽບເທົ່ານັ້ນ ແລະ ສິ່ງທີ່ເຂົາຮຽກຮ້ອງຈາກຜູ້ຄົນບໍ່ປ່ຽນແປງໄປຈາກບຸກຄົນສູ່ບຸກຄົນ; ເຂົາບໍ່ປະຕິບັດພາລະກິດຕາມຄວາມຕ້ອງການທີ່ແທ້ຈິງຂອງຜູ້ຄົນ. ໃນພາລະກິດປະເພດນີ້ ມີກົດລະບຽບຫຼາຍເກີນໄປ ແລະ ທິດສະດີຫຼາຍເກີນໄປ ແລະ ມັນບໍ່ສາມາດນຳຜູ້ຄົນເຂົ້າສູ່ຄວາມເປັນຈິງ ຫຼື ສູ່ການປະຕິບັດປົກກະຕິແຫ່ງການເຕີບໃຫຍ່ໃນຊີວິດໄດ້. ມັນສາມາດພຽງແຕ່ເຮັດໃຫ້ຜູ້ຄົນຍຶດຖືກົດລະບຽບສອງສາມຂໍ້ທີ່ບໍ່ມີຄ່າຫຍັງເລີຍ. ການນຳພາແບບນີ້ພຽງແຕ່ສາມາດນຳຜູ້ຄົນໃຫ້ຫຼົງທາງ. ເຂົານຳພາເຈົ້າໃຫ້ກາຍເປັນຄືກັບເຂົາ; ເຂົາສາມາດນຳເຈົ້າເຂົ້າສິ່ງທີ່ເຂົາມີ ແລະ ເປັນ. ເພື່ອທີ່ຜູ້ຕິດຕາມຈະແຍກແຍະວ່າ ຜູ້ນຳມີຄຸນສົມບັດ ຫຼື ບໍ່, ສິ່ງສຳຄັນແມ່ນຕ້ອງເບິ່ງທີ່ເສັ້ນທາງທີ່ພວກເຂົານຳພາ ແລະ ຜົນຂອງພາລະກິດຂອງພວກເຂົາ ແລະ ເບິ່ງວ່າ ຜູ້ຕິດຕາມໄດ້ຮັບຫຼັກການຕາມຄວາມຈິງ ຫຼື ບໍ່ ແລະ ພວກເຂົາໄດ້ຮັບວິທີການປະຕິບັດທີ່ເໝາະສົມສຳລັບການປ່ຽນແປງຂອງພວກເຂົາ ຫຼື ບໍ່. ເຈົ້າຄວນຈຳແນກລະຫວ່າງພາລະກິດທີ່ແຕກຕ່າງຂອງຜູ້ຄົນປະເພດຕ່າງໆ; ເຈົ້າບໍ່ຄວນເປັນຜູ້ຕິດຕາມທີ່ໂງ່ຈ້າ. ສິ່ງນີ້ມີຜົນຕໍ່ເລື່ອງທາງເຂົ້າສູ່ຂອງເຈົ້າ. ຖ້າເຈົ້າບໍ່ສາມາດຈຳແນກວ່າ ການເປັນຜູ້ນຳຂອງໃຜມີເສັ້ນທາງ ແລະ ຂອງໃຜບໍ່ມີ, ເຈົ້າກໍຈະຖືກຫຼອກລວງໄດ້ຢ່າງງ່າຍດາຍ. ທຸກສິ່ງນີ້ມີຄວາມກ່ຽວຂ້ອງໂດຍກົງກັບຊີວິດຂອງເຈົ້າເອງ. ມີຄວາມເປັນທຳມະຊາດຫຼາຍເກີນໄປໃນພາລະກິດຂອງຜູ້ຄົນທີ່ບໍ່ໄດ້ຖືກເຮັດໃຫ້ສົມບູນ; ມັນປະປົນກັບຄວາມປະສົງຂອງມະນຸດຫຼາຍຢ່າງ. ການເປັນຢູ່ຂອງພວກເຂົາແມ່ນຄວາມເປັນທຳມະຊາດ, ສິ່ງທີ່ພວກເຂົາເກີດມາພ້ອມ. ມັນບໍ່ແມ່ນຊີວິດຫຼັງຈາກທີ່ຖືກຈັດການ ຫຼື ຄວາມເປັນຈິງຫຼັງຈາກທີ່ໄດ້ຮັບການປ່ຽນແປງ. ຄົນປະເພດນີ້ຈະສາມາດສິ່ງເສີມຄົນທີ່ກຳລັງສະແຫວງຫາຊີວິດໄດ້ແນວໃດ? ຊີວິດດັ້ງເດີມທີ່ມະນຸດເປັນແມ່ນຄວາມສະຫຼາດ ແລະ ພອນສະຫວັນທີ່ມີມາຕັ້ງແຕ່ເກີດຂອງເຂົາ. ຄວາມສະຫຼາດ ຫຼື ພອນສະຫວັນປະເພດນີ້ຫ່າງຈາກສິ່ງທີ່ພຣະເຈົ້າຮຽກຮ້ອງຈາກມະນຸດຢ່າງແນ່ນອນຫຼາຍ. ຖ້າມະນຸດບໍ່ໄດ້ຖືກເຮັດໃຫ້ສົມບູນ

ແລະ ອຸປະນິໄສທີ່ເສື່ອມຊາມຂອງພວກເຂົາບໍ່ໄດ້ຖືກລິຮານ ແລະ ຈັດການ, ຈະມີຊ່ອງວ່າງທີ່ກວ້າງລະຫວ່າງສິ່ງທີ່ພວກເຂົາສະແດງອອກ ແລະ ຄວາມຈິງ; ສິ່ງທີ່ເຂົາສະແດງອອກຈະປະສົມກັບສິ່ງທີ່ບໍ່ແຈ່ມແຈ້ງ ເຊັ່ນ: ຈິນຕະນາການ ແລະ ປະສົບການຝ່າຍດຽວຂອງເຂົາ. ຍິ່ງໄປກວ່ານັ້ນ ບໍ່ວ່າເຂົາຈະປະຕິບັດພາລະກິດແນວໃດກໍຕາມ, ຜູ້ຄົນຮູ້ສຶກວ່າ ບໍ່ມີເປົ້າໝາຍໂດຍລວມ ແລະ ບໍ່ມີຄວາມຈິງທີ່ເໝາະສົມສຳລັບທາງເຂົ້າຂອງທຸກຄົນ. ສິ່ງທີ່ຮຽກຮ້ອງສ່ວນໃຫຍ່ຈາກຜູ້ຄົນແມ່ນຢູ່ນອກເໜືອຄວາມສາມາດຂອງພວກເຂົາ, ຄືກັບວ່າພວກເຂົາເປັນເປັດທີ່ຖືກໄລ່ໃຫ້ປີນງ່າໄມ້. ນີ້ແມ່ນພາລະກິດທີ່ມີຄວາມປະສົງຂອງມະນຸດ. ອຸປະນິໄສທີ່ເສື່ອມຊາມຂອງມະນຸດ, ຄວາມຄິດຂອງເຂົາ ແລະ ແນວຄິດຂອງເຂົາແຜ່ຄຸມໄປທົ່ວທຸກພາກສ່ວນໃນຮ່າງກາຍຂອງເຂົາ. ມະນຸດບໍ່ໄດ້ເກີດພ້ອມກັບສັນຊາດຕະຍານໃນການປະຕິບັດຄວາມຈິງ ຫຼື ເຂົາບໍ່ມີສັນຊາດຕະຍານທີ່ຈະເຂົ້າໃຈຄວາມຈິງໂດຍກົງ. ຖ້າປະກອບກັບອຸປະນິໄສທີ່ເສື່ອມຊາມຂອງມະນຸດ, ເມື່ອບຸກຄົນທີ່ທຳມະຊາດປະເພດນີ້ປະຕິບັດພາລະກິດ, ມັນຈະບໍ່ກໍ່ໃຫ້ເກີດການລົບກວນບໍ? ແຕ່ວ່າມະນຸດທີ່ຖືກເຮັດໃຫ້ສົມບູນແມ່ນມີປະສົບການແຫ່ງຄວາມຈິງທີ່ຜູ້ຄົນຄວນເຂົ້າໃຈ ແລະ ຄວາມຮູ້ກ່ຽວກັບອຸປະນິໄສທີ່ເສື່ອມຊາມຂອງພວກເຂົາ, ເພື່ອວ່າສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ເປັນຈິງໃນພາລະກິດຂອງເຂົາຈະຫາຍໄປເທື່ອລະໜ້ອຍ, ມົນທິນຂອງມະນຸດກໍຍິ່ງມີໜ້ອຍລົງ ແລະ ພາລະກິດ ແລະ ການບໍລິການຂອງເຂົາກໍຍິ່ງຫຍັບເຂົ້າໃກ້ມາດຕະຖານທີ່ພຣະເຈົ້າຮຽກຮ້ອງຫຼາຍຂຶ້ນ. ສະນັ້ນ ພາລະກິດຂອງເຂົາເຂົ້າສູ່ຄວາມເປັນຈິງແຫ່ງຄວາມຈິງ ແລະ ມັນຍັງກາຍມາເປັນຈິງອີກດ້ວຍ. ຄວາມຄິດທີ່ຢູ່ໃນຈິດໃຈຂອງມະນຸດຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດໂດຍສະເພາະ. ມະນຸດມີຈິນຕະນາການທີ່ອຸດົມສົມບູນ ແລະ ເຫດຜົນທີ່ສົມເຫດສົມຜົນ ແລະ ປະສົບການອັນຍາວນານໃນການຈັດການກັບເລື່ອງຕ່າງໆ. ຖ້າລັກສະນະເຫຼົ່ານີ້ບໍ່ຜ່ານການລິຮານ ແລະ ການເຮັດໃຫ້ຖືກຕ້ອງ, ພວກມັນທັງໝົດກໍຈະເປັນອຸປະສັກຕໍ່ພາລະກິດ. ດ້ວຍເຫດນັ້ນ ພາລະກິດຂອງມະນຸດບໍ່ສາມາດຍັ່ງເຖິງລະດັບທີ່ຖືກຕ້ອງທີ່ສຸດໄດ້, ໂດຍສະເພາະພາລະກິດຂອງຄົນທີ່ບໍ່ໄດ້ຖືກເຮັດໃຫ້ສົມບູນ.

ພາລະກິດຂອງມະນຸດຢູ່ພາຍໃນຂອບເຂດ ແລະ ມີຂໍ້ຈຳກັດ. ຄົນໜຶ່ງພຽງແຕ່ສາມາດປະຕິບັດພາລະກິດຂອງໄລຍະໃດໜຶ່ງ ແລະ ບໍ່ສາມາດປະຕິບັດພາລະກິດຂອງຍຸກທັງໝົດ, ຖ້າບໍ່ດັ່ງນັ້ນ ພວກເຂົາຈະນຳຜູ້ຄົນເຂົ້າສູ່ກົດລະບຽບ. ພາລະກິດຂອງມະນຸດພຽງແຕ່ສາມາດນຳໃຊ້ໄດ້ກັບເວລາ ຫຼື ໄລຍະໃດໜຶ່ງ. ນີ້ກໍຍ້ອນປະສົບການຂອງມະນຸດມີຂອບເຂດຂອງມັນ. ຄົນໃດໜຶ່ງບໍ່ສາມາດປຽບທຽບພາລະກິດຂອງມະນຸດກັບພາລະກິດຂອງພຣະເຈົ້າໄດ້. ວິທີການປະຕິບັດຂອງມະນຸດ ແລະ ຄວາມຮູ້ຂອງເຂົາກ່ຽວກັບຄວາມຈິງແມ່ນລ້ວນແລ້ວແຕ່ໃຊ້ໄດ້ກັບຂອບເຂດໃດໜຶ່ງ. ເຈົ້າບໍ່ສາມາດເວົ້າວ່າ ເສັ້ນທາງທີ່ມະນຸດກຳລັງຍ່າງແມ່ນຄວາມປະສົງຂອງພຣະວິນຍານບໍລິສຸດຢ່າງສົມບູນ, ຍ້ອນມະນຸດພຽງແຕ່ສາມາດໄດ້ຮັບແສງສະຫວ່າງໂດຍພຣະວິນຍານບໍລິສຸດ ແລະ ບໍ່ສາມາດຖືກເຕີມເຕັມດ້ວຍພຣະວິນຍານບໍລິສຸດຢ່າງສົມບູນ. ສິ່ງທີ່ມະນຸດສາມາດຜະເຊີນໄດ້ແມ່ນລ້ວນແລ້ວແຕ່ຢູ່ພາຍໃນຂອບເຂດຂອງຄວາມເປັນມະນຸດທີ່ທຳມະດາ ແລະ ບໍ່ສາມາດເກີນກວ່າຂອບເຂດຂອງຄວາມຄິດໃນຈິດໃຈທີ່ທຳມະດາຂອງມະນຸດ.

ທຸກຄົນທີ່ສາມາດດຳລົງຢູ່ໃນຄວາມເປັນຈິງຂອງປະສົບການຈິງຢູ່ໃນຂອບເຂດນີ້. ເມື່ອພວກເຂົາມີປະສົບການກັບຄວາມຈິງ ມັນກໍເປັນປະສົບການໃນຊີວິດຂອງມະນຸດທຳມະດາທີ່ຢູ່ໄດ້ຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດຢູ່ສະເໝີ; ມັນບໍ່ແມ່ນວິທີການມີປະສົບການທີ່ຫັນເຫມາຈາກຊີວິດຂອງມະນຸດທຳມະດາ. ພວກເຂົາຜະເຊີນກັບຄວາມຈິງທີ່ໄດ້ຮັບແສງສະຫວ່າງຈາກພຣະວິນຍານບໍລິສຸດເທິງພື້ນຖານຂອງການໃຊ້ຊີວິດຂອງມະນຸດຂອງພວກເຂົາ. ຍິ່ງໄປກວ່ານັ້ນ ຄວາມຈິງນີ້ມີຄວາມຫຼາກຫຼາຍຈາກບຸກຄົນສູ່ບຸກຄົນ ແລະ ຄວາມເລິກຂອງຄວາມຈິງນັ້ນກໍຂຶ້ນກັບສະພາວະຂອງບຸກຄົນ. ຄົນໃດໜຶ່ງພຽງແຕ່ສາມາດເວົ້າໄດ້ວ່າ ເສັ້ນທາງທີ່ພວກເຂົາຍ່າງແມ່ນຊີວິດທີ່ທຳມະດາຂອງມະນຸດທີ່ສະແຫວງຫາຄວາມຈິງ ແລະ ມັນອາດຖືກເອີ້ນໄດ້ວ່າ ເສັ້ນທາງທີ່ຄົນທຳມະດາຍ່າງ ຜູ້ເຊິ່ງໄດ້ຮັບແສງສະຫວ່າງຂອງພຣະວິນຍານບໍລິສຸດ. ເຈົ້າບໍ່ສາມາດເວົ້າວ່າ ເສັ້ນທາງທີ່ພວກເຂົາຍ່າງແມ່ນເສັ້ນທາງທີ່ພຣະວິນຍານບໍລິສຸດເລືອກ. ໃນປະສົບການຂອງມະນຸດທີ່ທຳມະດາ, ຍ້ອນວ່າ ຄົນທີ່ສະແຫວງຫາບໍ່ຄືກັນ, ພາລະກິດຂອງພຣະວິນຍານບໍລິສຸດຈຶ່ງບໍ່ຄືກັນ. ນອກຈາກນັ້ນ ຍ້ອນສະພາບແວດລ້ອມທີ່ຜູ້ຄົນຜະເຊີນ ແລະ ຂອບເຂດຂອງປະສົບການຂອງພວກເຂົາບໍ່ຄືກັນ ແລະ ຍ້ອນການເຈືອປົນທາງດ້ານຈິດໃຈ ແລະ ຄວາມຄິດຂອງພວກເຂົາ, ປະສົບການຂອງພວກເຂົາຈຶ່ງຖືກປະປົນຈົນເຖິງລະດັບທີ່ແຕກຕ່າງກັນ. ແຕ່ລະຄົນເຂົ້າໃຈຄວາມຈິງຕາມສະພາບການສ່ວນຕົວທີ່ແຕກຕ່າງກັນຂອງພວກເຂົາ. ຄວາມເຂົ້າໃຈຂອງພວກເຂົາໃນຄວາມໝາຍທີ່ແທ້ຈິງຂອງຄວາມຈິງແມ່ນບໍ່ຄົບຖ້ວນ ແລະ ເປັນພຽງໜຶ່ງ ຫຼື ສອງສາມລັກສະນະຂອງຄວາມຈິງ. ຂອບເຂດຄວາມຈິງທີ່ມະນຸດຜະເຊີນແມ່ນແຕກຕ່າງກັນໃນແຕ່ລະບຸກຄົນ ຕາມສະພາບການຂອງແຕ່ລະຄົນ. ດ້ວຍວິທີນີ້ ຄວາມຮູ້ແຫ່ງຄວາມຈິງອັນດຽວກັນ ເຊິ່ງຖືກສະແດງອອກໂດຍຄົນທີ່ແຕກຕ່າງກັນຈຶ່ງບໍ່ຄືກັນ. ນີ້ໝາຍຄວາມວ່າ ປະສົບການຂອງມະນຸດມີຂໍ້ຈຳກັດຢູ່ສະເໝີ ແລະ ບໍ່ສາມາດເປັນຕົວແທນໃຫ້ແກ່ຄວາມປະສົງຂອງພຣະວິນຍານບໍລິສຸດໄດ້ຢ່າງຄົບຖ້ວນ ຫຼື ພາລະກິດຂອງມະນຸດກໍບໍ່ສາມາດຮັບຮູ້ໄດ້ວ່າເປັນພາລະກິດຂອງພຣະເຈົ້າ, ເຖິງແມ່ນວ່າ ສິ່ງທີ່ມະນຸດສະແດງອອກສອດຄ່ອງຢ່າງໃກ້ຄຽງຫຼາຍກັບຄວາມປະສົງຂອງພຣະເຈົ້າ ແລະ ເຖິງແມ່ນວ່າປະສົບການຂອງມະນຸດໃກ້ຄຽງຫຼາຍກັບພາລະກິດໃນການເຮັດໃຫ້ສົມບູນທີ່ພຣະວິນຍານບໍລິສຸດປະຕິບັດຢູ່. ມະນຸດພຽງແຕ່ສາມາດເປັນຄົນຮັບໃຊ້ຂອງພຣະເຈົ້າ, ເຮັດພາລະກິດທີ່ພຣະເຈົ້າຝາກຝັງໃຫ້ແກ່ພວກເຂົາ. ມະນຸດພຽງແຕ່ສາມາດສະແດງຄວາມຮູ້ທີ່ຖືກສ່ອງແສງໂດຍພຣະວິນຍານບໍລິສຸດເທົ່ານັ້ນ ແລະ ຄວາມຈິງທີ່ໄດ້ຮັບຈາກປະສົບການສ່ວນຕົວຂອງເຂົາ. ມະນຸດບໍ່ມີຄຸນສົມບັດ ແລະ ບໍ່ໄດ້ບັນລຸເງື່ອນໄຂທີ່ຈະເປັນທາງອອກໃຫ້ກັບພຣະວິນຍານບໍລິສຸດ. ເຂົາບໍ່ມີສິດທີ່ຈະເວົ້າວ່າ ພາລະກິດຂອງເຂົາແມ່ນພາລະກິດຂອງພຣະເຈົ້າ. ມະນຸດມີຫຼັກການໃນການປະຕິບັດພາລະກິດຂອງມະນຸດ ແລະ ມະນຸດທຸກຄົນມີປະສົບການທີ່ແຕກຕ່າງກັນ ແລະ ມີສະພາບການທີ່ແຕກຕ່າງກັນອອກໄປ. ພາລະກິດຂອງມະນຸດປະກອບມີປະສົບການທຸກຢ່າງຂອງເຂົາພາຍໃຕ້ແສງສະຫວ່າງຂອງພຣະວິນຍານບໍລິສຸດ. ປະສົບການເຫຼົ່ານີ້ພຽງແຕ່ສາມາດເປັນຕົວແທນໃຫ້ແກ່ການເປັນຢູ່ຂອງມະນຸດ ແລະ ບໍ່ໄດ້ເປັນຕົວແທນໃຫ້ແກ່ການເປັນຢູ່ຂອງພຣະເຈົ້າ ຫຼື ຄວາມປະສົງຂອງພຣະວິນຍານບໍລິສຸດ. ດ້ວຍເຫດນັ້ນ ເສັ້ນທາງທີ່

ມະນຸດຢ່າງບໍ່ສາມາດເປັນເສັ້ນທາງທີ່ພຣະວິນຍານບໍລິສຸດຍ່າງ ຍ້ອນພາລະກິດຂອງມະນຸດບໍ່ສາມາດເປັນຕົວແທນໃຫ້ແກ່ພາລະກິດຂອງພຣະເຈົ້າໄດ້ ແລະ ພາລະກິດຂອງມະນຸດ ແລະ ປະສົບການຂອງມະນຸດບໍ່ແມ່ນຄວາມປະສົງອັນຄົບຖ້ວນຂອງພຣະວິນຍານບໍລິສຸດ. ພາລະກິດຂອງມະນຸດມີຄວາມສ່ຽງທີ່ຈະຕົກຢູ່ໃນກົດລະບຽບ ແລະ ວິທີການຂອງພາລະກິດຂອງເຂົາກໍຈະຖືກຈຳກັດໃຫ້ຢູ່ໃນຂອບເຂດທີ່ຈຳກັດຢ່າງງ່າຍດາຍ ແລະ ບໍ່ສາມາດນຳຜູ້ຄົນເຂົ້າສູ່ຫົນທາງແຫ່ງອິດສະຫຼະໄດ້. ຜູ້ຕິດຕາມສ່ວນໃຫຍ່ມີຊີວິດຢູ່ພາຍໃນຂອບເຂດທີ່ຈຳກັດ ແລະ ວິທີການມີປະສົບການຂອງພວກເຂົາກໍຈະຖືກຈຳກັດໃນຂອບເຂດນັ້ນເຊັ່ນກັນ. ປະສົບການຂອງມະນຸດຖືກຈຳກັດຢູ່ສະເໝີ; ວິທີການຂອງພາລະກິດຂອງພວກເຂົາກໍຖືກຈຳກັດຢູ່ໃນສອງສາມປະເພດເຊັ່ນກັນ ແລະ ບໍ່ສາມາດທຽບກັບພາລະກິດຂອງພຣະວິນຍານບໍລິສຸດໄດ້ ຫຼື ພາລະກິດຂອງພຣະເຈົ້າເອງ. ນີ້ກໍຍ້ອນວ່າ ໃນທີ່ສຸດແລ້ວ ປະສົບການຂອງມະນຸດແມ່ນມີຂໍ້ຈຳກັດ. ບໍ່ວ່າພຣະເຈົ້າຈະປະຕິບັດພາລະກິດຂອງພຣະອົງດ້ວຍວິທີໃດກໍຕາມ, ມັນກໍບໍ່ໄດ້ຖືກຜູກມັດໂດຍກົດລະບຽບ; ບໍ່ວ່າ ພາລະກິດນັ້ນຈະສຳເລັດລົງດ້ວຍວິທີໃດກໍຕາມ, ບໍ່ໄດ້ຖືກຈຳກັດດ້ວຍວິທີທາງໃດໜຶ່ງ. ບໍ່ມີກົດລະບຽບໃດໆໃນພາລະກິດຂອງພຣະເຈົ້າ, ພາລະກິດທັງໝົດຂອງພຣະອົງແມ່ນຖືກປ່ອຍ ແລະ ເປັນອິດສະຫຼະ. ບໍ່ວ່າ ມະນຸດຈະໃຊ້ເວລາຫຼາຍພຽງໃດໃນການຕິດຕາມພຣະອົງ, ເຂົາບໍ່ສາມາດກັ່ນຕອງເອົາກົດເກນໃດໜຶ່ງທີ່ປົກຄອງວິທີການປະຕິບັດພາລະກິດຂອງພຣະເຈົ້າ. ເຖິງແມ່ນພາລະກິດຂອງພຣະອົງມີຫຼັກການ ມັນກໍຖືກປະຕິບັດໃນວິທີທາງໃໝ່ຢູ່ສະເໝີ ແລະ ມີການພັດທະນາໃໝ່ຢູ່ສະເໝີ ແລະ ມັນຢູ່ນອກເໜືອການຢັ່ງເຖິງຂອງມະນຸດ. ໃນລະຫວ່າງຊ່ວງເວລາໜຶ່ງພຣະເຈົ້າອາດມີພາລະກິດຫຼາຍປະເພດທີ່ແຕກຕ່າງກັນ ແລະ ວິທີການນຳພາຜູ້ຄົນທີ່ແຕກຕ່າງກັນ ເຊິ່ງເຮັດໃຫ້ຜູ້ຄົນມີທາງເຂົ້າ ແລະ ການປ່ຽນແປງໃໝ່ຢູ່ສະເໝີ. ເຈົ້າບໍ່ສາມາດແຍກແຍະພຣະບັນຍັດຂອງພາລະກິດຂອງພຣະເຈົ້າໄດ້ ຍ້ອນພຣະອົງປະຕິບັດພາລະກິດໃນວິທີໃໝ່ຢູ່ສະເໝີ ແລະ ມີພຽງແຕ່ວິທີນີ້ເທົ່ານັ້ນ ຜູ້ຕິດຕາມຂອງພຣະເຈົ້າຈະບໍ່ຖືກຜູກມັດໂດຍກົດລະບຽບ. ພາລະກິດຂອງພຣະເຈົ້າເອງຫຼີກລ່ຽງແນວຄິດຂອງຜູ້ຄົນ ແລະ ຕໍ່ຕ້ານພວກມັນຢູ່ສະເໝີ. ມີພຽງຄົນທີ່ຕິດຕາມ ແລະ ສະແຫວງຫາພຣະເຈົ້າດ້ວຍຫົວໃຈທີ່ແທ້ຈິງຈຶ່ງສາມາດປ່ຽນແປງອຸປະນິໄສຂອງພວກເຂົາ ແລະ ສາມາດມີຊີວິດຢ່າງອິດສະຫຼະໂດຍບໍ່ຢູ່ພາຍໃຕ້ກົດລະບຽບໃດໜຶ່ງ ຫຼື ຖືກຄວບຄຸມໂດຍແນວຄິດທາງສາສະໜາໃດໜຶ່ງ. ພາລະກິດຂອງມະນຸດຮຽກຮ້ອງຈາກຜູ້ຄົນ ໂດຍອີງຕາມປະສົບການຂອງເຂົາເອງ ແລະ ສິ່ງທີ່ເຂົາເອງສາມາດບັນລຸໄດ້. ມາດຕະຖານຂອງເງື່ອນໄຂເຫຼົ່ານີ້ແມ່ນຖືກຈຳກັດຢູ່ພາຍໃນຂອບເຂດໃດໜຶ່ງ ແລະ ວິທີການປະຕິບັດກໍມີຂໍ້ຈຳກັດຫຼາຍເຊັ່ນດຽວກັນ. ສະນັ້ນ ຜູ້ຕິດຕາມຈຶ່ງມີຊີວິດຢູ່ພາຍໃນຂອບເຂດທີ່ຈຳກັດນີ້ຢ່າງບໍ່ມີສະຕິ; ເມື່ອເວລາຜ່ານໄປ ສິ່ງຕ່າງໆເຫຼົ່ານີ້ກໍກາຍມາເປັນກົດລະບຽບ ແລະ ພິທີກຳ. ຖ້າພາລະກິດຂອງໄລຍະໜຶ່ງຖືກນຳພາໂດຍຜູ້ໃດຜູ້ໜຶ່ງທີ່ບໍ່ໄດ້ຜ່ານການເຮັດໃຫ້ສົມບູນໂດຍພຣະເຈົ້າເປັນການສ່ວນຕົວ ແລະ ບໍ່ໄດ້ຮັບການພິພາກສາ, ຜູ້ຕິດຕາມທັງໝົດຂອງເຂົາຈະກາຍເປັນນັກສາສະໜາ ແລະ ຜູ້ຊ່ຽວຊານໃນການຕໍ່ຕ້ານພຣະເຈົ້າ. ດ້ວຍເຫດນັ້ນ ຖ້າຜູ້ໃດໜຶ່ງເປັນຜູ້ນຳທີ່ມີຄຸນສົມບັດ, ຄົນນັ້ນຕ້ອງຜ່ານການພິພາກສາ ແລະ ຍອມຮັບການຖືກເຮັດໃຫ້ສົມບູນ. ຄົນທີ່ບໍ່ໄດ້ຜ່ານການພິພາກສາ,

ເຖິງແມ່ນວ່າພວກເຂົາອາດມີພາລະກິດຂອງພຣະວິນຍານບໍລິສຸດ, ກໍພຽງແຕ່ສະແດງສິ່ງທີ່ບໍ່ແຈ່ມແຈ້ງ ແລະ ບໍ່ເປັນຈິງເທົ່ານັ້ນ. ໃນເວລານັ້ນ ພວກເຂົາຈະນຳພາຜູ້ຄົນເຂົ້າສູ່ກົດລະບຽບທີ່ບໍ່ແຈ່ມແຈ້ງ ແລະ ເໜືອທຳມະຊາດ. ພາລະກິດທີ່ພຣະເຈົ້າປະຕິບັດບໍ່ສອດຄ່ອງກັບເນື້ອໜັງຂອງມະນຸດ. ມັນບໍ່ສອດຄ່ອງກັບຄວາມຄິດຂອງມະນຸດ ແຕ່ຕໍ່ຕ້ານແນວຄິດຂອງມະນຸດ; ມັນບໍ່ໄດ້ປະປົນກັບທາດແທ້ທີ່ບໍ່ແຈ່ມແຈ້ງຂອງສາສະໜາ. ຜົນຂອງພາລະກິດຂອງພຣະເຈົ້າບໍ່ສາມາດບັນລຸໄດ້ໂດຍຜູ້ໃດຜູ້ໜຶ່ງທີ່ບໍ່ໄດ້ຖືກພຣະອົງເຮັດໃຫ້ສົມບູນ; ພວກມັນເປັນສິ່ງທີ່ຢູ່ນອກເໜືອການຢັ່ງຄິດຂອງມະນຸດ.

ພາລະກິດໃນຈິດໃຈຂອງມະນຸດແມ່ນບັນລຸຜົນໂດຍມະນຸດໄດ້ຢ່າງງ່າຍດາຍເກີນໄປ. ຕົວຢ່າງ ສິດຍາພິບານ ແລະ ຜູ້ນຳໃນໂລກແຫ່ງສາສະໜາອາໄສພອນສະຫວັນ ແລະ ຕຳແໜ່ງຂອງພວກເຂົາເພື່ອປະຕິບັດພາລະກິດຂອງພວກເຂົາ. ຄົນທີ່ຕິດຕາມພວກເຂົາເປັນເວລາດົນນານຈະຕິດເຊື້ອໄດ້ຮັບຜົນກະທົບຈາກພອນສະຫວັນຂອງພວກເຂົາ ແລະ ໄດ້ຮັບອິດທິພົນຈາກສິ່ງທີ່ພວກເຂົາເປັນ. ພວກເຂົາແນໃສ່ພອນສະຫວັນ, ຄວາມສາມາດ ແລະ ຄວາມຮູ້ຂອງຜູ້ຄົນ ແລະ ພວກເຂົາໃສ່ໃຈກັບສິ່ງທີ່ເໜືອທຳມະຊາດບາງຢ່າງ ແລະ ທິດສະດີຫຼາຍຢ່າງທີ່ເລິກເຊິ່ງ ແລະ ບໍ່ເປັນຈິງ (ແນ່ນອນ ທິດສະດີທີ່ເລິກເຊິ່ງເຫຼົ່ານີ້ບໍ່ສາມາດຢັ່ງເຖິງໄດ້). ພວກເຂົາບໍ່ແນໃສ່ການປ່ຽນແປງໃນອຸປະນິໄສຂອງຜູ້ຄົນ, ແຕ່ກົງກັນຂ້າມພວກເຂົາແນໃສ່ຝຶກຝົນການເທດສະໜາຂອງຄົນ ແລະ ປະຕິບັດພາລະກິດ, ປັບປຸງຄວາມຮູ້ຂອງຄົນ ແລະ ທິດສະດີທາງສາສະໜາທີ່ອຸດົມສົມບູນຂອງພວກເຂົາ. ພວກເຂົາບໍ່ສົນໃຈວ່າ ອຸປະນິໄສຂອງຄົນປ່ຽນແປງຫຼາຍພຽງໃດ ຫຼື ຜູ້ຄົນເຂົ້າໃຈຄວາມຈິງຫຼາຍພຽງໃດ. ພວກເຂົາບໍ່ສົນໃຈກັບແກ່ນແທ້ຂອງຜູ້ຄົນ ແລະ ແຮງໄກທີ່ພວກເຂົາຈະພະຍາຍາມຮູ້ຈັກສະພາວະທີ່ທຳມະດາ ແລະ ບໍ່ທຳມະດາຂອງຜູ້ຄົນເລີຍ. ພວກເຂົາບໍ່ຕໍ່ຕ້ານແນວຄິດຂອງຜູ້ຄົນ ຫຼື ພວກເຂົາບໍ່ເປີດເຜີຍແນວຄິດຂອງພວກເຂົາ, ແຮງໄກທີ່ພວກເຂົາຈະລິຮານຜູ້ຄົນສຳລັບຄວາມຂາດຕົກບົກຜ່ອງ ຫຼື ການເສື່ອມຊາມຂອງພວກເຂົາເລີຍ. ຄົນສ່ວນໃຫຍ່ທີ່ຕິດຕາມພວກເຂົາກໍຮັບໃຊ້ດ້ວຍພອນສະຫວັນຂອງພວກເຂົາ ແລະ ສິ່ງທີ່ພວກເຂົາສະແດງອອກມາມີພຽງແນວຄິດທາງສາສະໜາ ແລະ ທິດສະດີໃນສາສະໜາສາດ, ເຊິ່ງບໍ່ໄດ້ສຳຜັດກັບຄວາມເປັນຈິງ ແລະ ບໍ່ສາມາດໃຫ້ມອບຊີວິດໃຫ້ແກ່ຜູ້ຄົນແທ້ໆ. ໃນຄວາມຈິງ ແກ່ນແທ້ຂອງພາລະກິດຂອງພວກເຂົາແມ່ນການບຳລຸງລ້ຽງພອນສະຫວັນ, ລ້ຽງດູບຸກຄົນທີ່ບໍ່ມີຫຍັງເລີຍໃຫ້ກາຍເປັນຜູ້ສຳເລັດທີ່ມີພອນສະຫວັນຈາກການສຳມະນາ ເຊິ່ງຕໍ່ມາກໍໄດ້ເປັນຜູ້ປະຕິບັດພາລະກິດ ແລະ ນຳພາ. ເຈົ້າສາມາດແຍກແຍະພຣະບັນຍັດໃດໜຶ່ງໃນຫົກພັນປີແຫ່ງພາລະກິດຂອງພຣະເຈົ້າບໍ? ມີກົດລະບຽບ ແລະ ຂໍ້ກຳນົດຫຼາຍຢ່າງໃນພາລະກິດທີ່ມະນຸດປະຕິບັດ ແລະ ສະໝອງຂອງມະນຸດກໍດື້ດ້ານເກີນໄປ. ສະນັ້ນ ສິ່ງທີ່ມະນຸດສະແດງອອກແມ່ນຄວາມຮູ້ ແລະ ການເປັນຈິງທີ່ຢູ່ພາຍໃນຂອບເຂດປະສົບການຂອງເຂົາ. ມະນຸດບໍ່ສາມາດສະແດງສິ່ງໃດກໍຕາມນອກຈາກສິ່ງນີ້. ປະສົບການ ຫຼື ຄວາມຮູ້ຂອງມະນຸດບໍ່ໄດ້ເກີດຈາກພອນສະຫວັນມາຕັ້ງແຕ່ເກີດຂອງເຂົາ ຫຼື ສັນຊາດຕະຍານຂອງເຂົາ; ພວກມັນເກີດຂຶ້ນກໍຍ້ອນການນຳພາຂອງພຣະເຈົ້າ ແລະ ການດູແລໂດຍກົງຂອງພຣະເຈົ້າ. ມະນຸດມີພຽງແຕ່ໜ້າທີ່ຮັບເອົາການດູແລນີ້ ແລະ ບໍ່ມີໜ້າທີ່ສະແດງອອກສິ່ງທີ່ເປັນພຣະເຈົ້າໂດຍກົງ. ມະນຸດບໍ່ສາມາດເປັນແຫຼ່ງ

ກຳເນີດໄດ້; ເຂົາພຽງແຕ່ສາມາດເປັນພາຊະນະທີ່ຮັບນໍ້າຈາກແຫຼ່ງກຳເນີດ; ນີ້ແມ່ນສັນຊາດຕະຍານຂອງມະນຸດ, ເຊິ່ງເປັນໜ້າທີ່ໆຄົນໜຶ່ງຕ້ອງມີໃນຖານະທີ່ເປັນມະນຸດ. ຖ້າບຸກຄົນໜຶ່ງສູນເສຍໜ້າທີ່ໆຈະຍອມຮັບພຣະທຳຂອງພຣະເຈົ້າ ແລະ ສູນເສຍສັນຊາດຕະຍານຂອງມະນຸດ, ຄົນນັ້ນກໍສູນເສຍສິ່ງທີ່ລໍ້າຄ່າທີ່ສຸດເຊັ່ນດຽວກັນ, ບຸກຄົນນັ້ນຍັງ ສູນເສຍໜ້າທີ່ຂອງມະນຸດທີ່ຖືກສ້າງ. ຖ້າຄົນໜຶ່ງບໍ່ມີຄວາມຮູ້ ຫຼື ປະສົບການກ່ຽວກັບພຣະທຳຂອງພຣະເຈົ້າ ຫຼື ພາລະກິດຂອງພຣະອົງ, ຄົນນັ້ນກໍສູນເສຍໜ້າທີ່ຂອງເຂົາ, ໜ້າທີ່ໆເຂົາຄວນປະຕິບັດໃນຖານະທີ່ເປັນສິ່ງທີ່ຖືກສ້າງ ແລະ ສູນເສຍສັກສີຂອງການເປັນສິ່ງທີ່ຖືກສ້າງ. ມັນເປັນສັນຊາດຕະຍານຂອງພຣະເຈົ້າທີ່ຈະສະແດງໃຫ້ເຫັນວ່າ ຄວາມເປັນພຣະເຈົ້າແມ່ນຫຍັງ, ບໍ່ວ່າຄວາມເປັນພຣະເຈົ້າຈະຖືກສະແດງອອກໃນເນື້ອໜັງ ຫຼື ໂດຍພຣະວິນຍານໂດຍກົງ; ນີ້ແມ່ນພັນທະກິດຂອງພຣະເຈົ້າ. ມະນຸດສະແດງປະສົບການ ຫຼື ຄວາມຮູ້ຂອງເຂົາເອງ (ນັ້ນກໍຄື ສະແດງສິ່ງທີ່ເຂົາເປັນ) ໃນລະຫວ່າງພາລະກິດຂອງພຣະເຈົ້າ ຫຼື ພາຍຫຼັງ; ນີ້ແມ່ນສັນຊາດຕະຍານຂອງມະນຸດ ແລະ ໜ້າທີ່ຂອງມະນຸດ ແລະ ມັນແມ່ນສິ່ງທີ່ມະນຸດຄວນບັນລຸ. ເຖິງແມ່ນການສະແດງອອກຂອງມະນຸດບໍ່ເປັນໄປຕາມສິ່ງທີ່ພຣະເຈົ້າສະແດງອອກ ແລະ ເຖິງແມ່ນການສະແດງອອກຂອງມະນຸດຖືກຜູກມັດໂດຍກົດລະບຽບຫຼາຍຢ່າງ, ມະນຸດຕ້ອງເຮັດໃຫ້ໜ້າທີ່ ທີ່ເຂົາຄວນເຮັດໃຫ້ສຳເລັດນັ້ນສຳເລັດລົງ ແລະ ປະຕິບັດໃນສິ່ງທີ່ພວກເຂົາຕ້ອງປະຕິບັດ. ມະນຸດຄວນປະຕິບັດທຸກສິ່ງທີ່ມະນຸດສາມາດເຮັດເພື່ອປະຕິບັດໜ້າທີ່ຂອງເຂົາ ແລະ ເຂົາບໍ່ຄວນມີການລະເວັ້ນແມ່ນແຕ່ໜ້ອຍດຽວ.

ຫຼັງຈາກການປະຕິບັດພາລະກິດເປັນເວລາຫຼາຍປີ, ມະນຸດຈະສະຫຼຸບປະສົບການໃນຫຼາຍປີທີ່ປະຕິບັດພາລະກິດຂອງເຂົາ ພ້ອມທັງສະຕິປັນຍາ ແລະ ກົດລະບຽບທີ່ເຂົາຮວບໂຮມໄດ້. ຄົນທີ່ປະຕິບັດພາລະກິດເປັນເວລາດົນນານກໍຮູ້ຈັກວິທີການສຳຜັດການເຄື່ອນໄຫວແຫ່ງພາລະກິດຂອງພຣະວິນຍານບໍລິສຸດ; ເຂົາຮູ້ຈັກວິທີການສົນທະນາ ໃນຂະນະທີ່ແບກພາລະ; ແລະ ເຂົາມີສະຕິກ່ຽວກັບສະພາວະປົກກະຕິໃນພາລະກິດຂອງພຣະວິນຍານບໍລິສຸດ ແລະ ສະພາວະປົກກະຕິຂອງການເຕີບໃຫຍ່ໃນຊີວິດຂອງຜູ້ຄົນ. ຄົນດັ່ງກ່າວແມ່ນຄົນທີ່ໄດ້ປະຕິບັດພາລະກິດເປັນເວລາຫຼາຍປີ ແລະ ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ. ຄົນທີ່ໄດ້ປະຕິບັດພາລະກິດເປັນເວລາດົນນານເວົ້າຢ່າງໝັ້ນໃຈ ແລະ ບໍ່ຮີບຮ້ອນ; ເຖິງແມ່ນໃນເວລາທີ່ພວກເຂົາບໍ່ມີຫຍັງເວົ້າ ພວກເຂົາກໍຈະງຽບສະຫງົບ. ຂ້າງໃນພວກເຂົາສາມາດສືບຕໍ່ອະທິຖານເພື່ອສະແຫວງຫາພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຊື່ອຟັງພຣະເຈົ້າຢ່າງແທ້ຈິງ; ພວກເຂົາມີປະສົບການໃນການປະຕິບັດພາລະກິດ. ຄົນທີ່ໄດ້ປະຕິບັດພາລະກິດເປັນເວລາດົນນານຜູ້ເຊິ່ງມີປະສົບການຫຼາຍ ແລະ ໄດ້ຮຽນຮູ້ຫຼາຍບົດຮຽນ ແມ່ນມີຫຼາຍຢ່າງຢູ່ຂ້າງໃນທີ່ເປັນອຸປະສັກຕໍ່ພາລະກິດຂອງພຣະວິນຍານບໍລິສຸດ; ນີ້ແມ່ນຄວາມບົກຜ່ອງຂອງພາລະກິດໄລຍະຍາວຂອງເຂົາ. ຄົນທີ່ຫາກໍເລີ່ມຕົ້ນປະຕິບັດພາລະກິດຍັງບໍ່ຖືກເຈືອປົນໂດຍບົດຮຽນ ຫຼື ປະສົບການຂອງມະນຸດ ແລະ ມຶນງົງໂດຍສະເພາະກ່ຽວກັບວິທີທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ. ເຖິງຢ່າງໃດກໍຕາມ ໃນລະຫວ່າງຊ່ວງເວລາຂອງພາລະກິດ ເຂົາກໍຮຽນຮູ້ເທື່ອລະໜ້ອຍທີ່ຈະຮູ້ສຶກເຖິງວິທີການປະຕິບັດພາລະກິດຂອງພຣະວິນຍານບໍລິສຸດ ແລະ ເລີ່ມມີຮັບຮູ້ໃນສິ່ງທີ່ຕ້ອງເຮັດເພື່ອໄດ້ຮັບພາລະກິດຂອງພຣະວິນຍານ

ບໍລິສຸດ, ສິ່ງທີ່ຕ້ອງເຮັດເພື່ອໂຈມຕີຈຸດສຳຄັນຂອງຄົນອື່ນແທ້ໆ ແລະ ສິ່ງອື່ນໆ ເຊັ່ນ: ຄວາມຮູ້ສາມັນເຊິ່ງຄົນທີ່ປະຕິບັດພາລະກິດຄວນມີ. ຕະຫຼອດເວລາ ເຂົາໄດ້ມາຮູ້ຈັກສະຕິປັນຍາດັ່ງກ່າວ ແລະ ຄວາມຮູ້ສາມັນກ່ຽວກັບການປະຕິບັດພາລະກິດຄືກັບຫຼັງມືຂອງພວກເຂົາ ແລະ ເບິ່ງຄືຈະນຳໃຊ້ມັນຢ່າງງ່າຍດາຍເມື່ອກຳລັງປະຕິບັດພາລະກິດ. ເຖິງຢ່າງໃດກໍຕາມ ເມື່ອພຣະວິນຍານບໍລິສຸດປ່ຽນແປງວິທີທີ່ພຣະອົງປະຕິບັດພາລະກິດ, ເຂົາກໍຍັງຍຶດຕິດກັບຄວາມຮູ້ເດີມຂອງເຂົາກ່ຽວກັບພາລະກິດ ແລະ ກົດລະບຽບເດີມກ່ຽວກັບພາລະກິດ ແລະ ຮູ້ຈັກພຽງໜ້ອຍດຽວກ່ຽວກັບການເຄື່ອນໄຫວໃໝ່ຂອງພາລະກິດ. ຫຼາຍປີໃນການປະຕິບັດພາລະກິດ ແລະ ການເຕັມໄປດ້ວຍການສະຖິດ ແລະ ການນຳພາຂອງພຣະວິນຍານບໍລິສຸດ ເຮັດໃຫ້ເຂົາໄດ້ຮັບບົດຮຽນຫຼາຍຂຶ້ນກ່ຽວກັບພາລະກິດ ແລະ ຍິ່ງມີປະສົບການຫຼາຍຂຶ້ນ. ສິ່ງດັ່ງກ່າວໄດ້ເຕີມເຕັມເຂົາດ້ວຍຄວາມໝັ້ນໃຈໃນຕົວເອງເຊິ່ງບໍ່ແມ່ນຄວາມພາກພູມໃຈເລີຍ. ເວົ້າອີກຢ່າງໜຶ່ງກໍຄື ເຂົາຂ້ອນຂ້າງພໍໃຈກັບພາລະກິດຂອງເຂົາເອງ ແລະ ພໍໃຈກັບຄວາມຮູ້ສາມັນທີ່ເຂົາໄດ້ຮັບ ເຊິ່ງກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ. ໂດຍສະເພາະແລ້ວການໄດ້ຮັບ ຫຼື ການຮັບຮູ້ສິ່ງເຫຼົ່ານີ້ທີ່ຄົນມີບໍ່ໄດ້ເຮັດໃຫ້ພວກເຂົາຍິ່ງມີຄວາມໝັ້ນໃຈໃນຕົນເອງຫຼາຍຂຶ້ນ; ມັນເບິ່ງຄືກັບວ່າ ພາລະກິດຂອງພຣະວິນຍານບໍລິສຸດທີ່ຢູ່ພາຍໃນຕົວເຂົາບໍ່ສາມາດເຮັດໃຫ້ມອດດັບໄດ້, ໃນຂະນະທີ່ຄົນອື່ນບໍ່ມີຄຸນສົມບັດທີ່ຈະໄດ້ຮັບການປະຕິບັດທີ່ພິເສດນີ້. ມີພຽງຄົນປະເພດແບບເຂົາ ຜູ້ທີ່ໄດ້ປະຕິບັດພາລະກິດເປັນເວລາຫຼາຍປີ ແລະ ມີຄຸນຄ່ານຳໃຊ້ທີ່ສຳຄັນຈຶ່ງມີຄຸນສົມບັດໃນການຮັບສິ່ງນັ້ນ. ສິ່ງເຫຼົ່ານີ້ກາຍມາເປັນອຸປະສັກທີ່ຍິ່ງໃຫຍ່ສຳລັບພວກເຂົາໃນການຍອມຮັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ. ເຖິງແມ່ນເຂົາສາມາດຍອມຮັບພາລະກິດໃໝ່, ເຂົາກໍບໍ່ສາມາດເຮັດໄດ້ພຽງຂ້າມຄືນ. ເຂົາຕ້ອງຜ່ານສະຖານການສະຫຼົບຊັບຊ້ອນກ່ອນທີ່ຈະຍອມຮັບມັນໄດ້ຢ່າງແນ່ນອນ. ສະຖານະການນີ້ພຽງແຕ່ສາມາດຖືກປີ້ນກັບເທື່ອລະໜ້ອຍ, ຫຼັງຈາກທີ່ແນວຄວາມຄິດເກົ່າຂອງເຂົາຖືກຈັດການ ແລະ ອຸປະນິໄສເກົ່າຂອງເຂົາຖືກພິພາກສາ. ຫາກປາສະຈາກການຜ່ານຂັ້ນຕອນເຫຼົ່ານີ້ ພວກເຂົາຈະບໍ່ປ່ອຍໄປ ແລະ ຍອມຮັບຄຳສັ່ງສອນໃໝ່ ແລະ ພາລະກິດທີ່ບໍ່ສອດຄ່ອງກັບແນວຄິດເດີມຂອງເຂົາຢ່າງງ່າຍດາຍ. ນີ້ຄືສິ່ງທີ່ຍາກສຸດກ່ຽວກັບການຈັດການມະນຸດ ແລະ ມັນບໍ່ງ່າຍທີ່ຈະປ່ຽນແປງ. ໃນຖານະທີ່ເປັນຄົນປະຕິບັດພາລະກິດ ຖ້າເຂົາສາມາດບັນລຸຄວາມເຂົ້າໃຈກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດທັນທີ ແລະ ສະຫຼຸບການເຄື່ອນໄຫວຂອງພາລະກິດນັ້ນ ແລະ ຖ້າເຂົາສາມາດທີ່ຈະບໍ່ຖືກຈຳກັດໂດຍປະສົບການ ໃນພາລະກິດຂອງເຂົາ ແລະ ຍອມຮັບພາລະກິດໃໝ່ຕາມຄວາມຈິງແຫ່ງພາລະກິດເກົ່າ, ແລ້ວເຂົາແມ່ນຄົນທີ່ມີສະຕິປັນຍາ ແລະ ຄົນປະຕິບັດພາລະກິດທີ່ມີຄຸນສົມບັດ. ຜູ້ຄົນເປັນແບບນີ້ຢູ່ເລື້ອຍໆ: ພວກເຂົາປະຕິບັດພາລະກິດເປັນເວລາຫຼາຍປີໂດຍບໍ່ສາມາດສະຫຼຸບປະສົບການໃນພາລະກິດຂອງພວກເຂົາ ຫຼື ຫຼັງຈາກທີ່ໄດ້ສະຫຼຸບປະສົບການ ແລະ ສະຕິປັນຍາຂອງພວກເຂົາທີ່ກ່ຽວຂ້ອງກັບພາລະກິດ, ພວກເຂົາກໍຖືກຂັດຂວາງບໍ່ໃຫ້ຍອມຮັບພາລະກິດໃໝ່ ແລະ ບໍ່ສາມາດເຂົ້າໃຈຢ່າງເໝາະສົມ ຫຼື ປະຕິບັດຕໍ່ພາລະກິດທີ່ເກົ່າ ແລະ ໃໝ່ຢ່າງຖືກຕ້ອງ. ຜູ້ຄົນເປັນສິ່ງທີ່ຈັດການຍາກແທ້ໆ! ພວກເຈົ້າສ່ວນໃຫຍ່ເປັນແບບນີ້. ຄົນທີ່ໄດ້ຜະເຊີນກັບພາລະກິດຂອງພຣະວິນຍານບໍລິສຸດ

ເປັນເວລາຫຼາຍປີກໍພົບວ່າ ມັນຍາກທີ່ຈະຍອມຮັບພາລະກິດໃໝ່ ແລະ ພວກເຂົາເຕັມໄປດ້ວຍແນວຄິດຢູ່ທີ່ພວກເຂົາບໍ່ສາມາດໂຍນຖິ້ມຢູ່ສະເໝີ, ໃນຂະນະທີ່ມະນຸດທີ່ຫາກໍເລີ່ມຕົ້ນປະຕິບັດພາລະກິດພັດຂາດຄວາມຮູ້ສາມັນກ່ຽວກັບພາລະກິດ ແລະ ບໍ່ຮູ້ແມ່ນແຕ່ວິທີຈັດການກັບບັນຫາບາງຢ່າງທີ່ເລັກນ້ອຍທີ່ສຸດ. ພວກເຈົ້າເປັນຄົນທີ່ຫຍຸ້ງຍາກແທ້ໆ! ຄົນທີ່ມີຄວາມເປັນອາວຸໂສບາງຢ່າງກໍພາກພູມໃຈຫຼາຍ ແລະ ທະນົງຕົວວ່າຈົນພວກເຂົາລືມວ່າ ພວກເຂົາມາຈາກໃສ. ພວກເຂົາດູຖູກຄົນໜຸ່ມກວ່າຢູ່ສະເໝີ ແຕ່ພວກເຂົາບໍ່ສາມາດຍອມຮັບພາລະກິດໃໝ່ ແລະ ປະຖິ້ມແນວຄິດທີ່ພວກເຂົາໄດ້ສະສົມ ແລະ ຮັກສາເປັນເວລາຫຼາຍປີ. ເຖິງແມ່ນຄົນໜຸ່ມນ້ອຍທີ່ໂງ່ຈ້າເຫຼົ່ານັ້ນຈະສາມາດຍອມຮັບພາລະກິດໃໝ່ທີ່ເລັກນ້ອຍຂອງພຣະວິນຍານບໍລິສຸດ ແລະ ຂ້ອນຂ້າງຈະກະຕືລືລົ້ນ, ພວກເຂົາກໍສັບສົນຢູ່ສະເໝີ ແລະ ບໍ່ຮູ້ວ່າຈະເຮັດແນວໃດເມື່ອບັນຫາເກີດຂຶ້ນ. ພວກເຂົາກະຕືລືລົ້ນ ແຕ່ໂງ່ຈ້າ. ພວກເຂົາພຽງແຕ່ມີຄວາມຮູ້ເລັກນ້ອຍກ່ຽວກັບພາລະກິດຂອງພຣະວິນຍານບໍລິສຸດ ແລະ ບໍ່ສາມາດນຳໃຊ້ມັນໃນຊີວິດຂອງພວກເຂົາ; ມັນເປັນພຽງທິດສະດີທີ່ບໍ່ມີປະໂຫຍດເລີຍ. ມີຫຼາຍຄົນທີ່ຄ້າຍຄືກັນກັບພວກເຈົ້າ; ມີຈັກຄົນທີ່ເໝາະສົມແກ່ການນຳໃຊ້? ມີຈັກຄົນທີ່ສາມາດເຊື່ອຟັງແສງສະຫວ່າງ ແລະ ແສງເຍືອງທາງຂອງພຣະວິນຍານບໍລິສຸດ ແລະ ຈັດການໃຫ້ສອດຄ່ອງກັບຄວາມປະສົງຂອງພຣະເຈົ້າ? ມັນເບິ່ງຄືກັບວ່າພວກເຈົ້າເຫຼົ່ານັ້ນທີ່ເຄີຍເປັນຜູ້ຕິດຕາມຈົນຮອດປັດຈຸບັນໄດ້ເຊື່ອຟັງຫຼາຍ, ແຕ່ໃນຄວາມຈິງ ພວກເຈົ້າບໍ່ເຄີຍປະຖິ້ມແນວຄິດຂອງພວກເຈົ້າເລີຍ, ພວກເຈົ້າຍັງສະແຫວງຫາໃນພຣະຄຳພີ, ເຊື່ອໃນຄວາມບໍ່ແຈ່ມແຈ້ງ ຫຼື ຫຼົງທາງໃນແນວຄິດ. ບໍ່ມີໃຜທີ່ສືບສວນພາລະກິດທີ່ແທ້ຈິງໃນປັດຈຸບັນຢ່າງລະມັດລະວັງ ຫຼື ລົງເລິກກັບພາລະກິດນັ້ນ. ພວກເຈົ້າກຳລັງຍອມຮັບວິທີທາງແຫ່ງປັດຈຸບັນດ້ວຍແນວຄິດເດີມຂອງພວກເຈົ້າ. ພວກເຈົ້າຈະສາມາດຮັບຫຍັງຈາກຄວາມເຊື່ອດັ່ງກ່າວ? ມັນສາມາດເວົ້າໄດ້ວ່າມີແນວຄິດຫຼາຍຢ່າງທີ່ເຊື່ອງຊ້ອນໃນຕົວພວກເຈົ້າທີ່ບໍ່ຖືກເປີດເຜີຍເທື່ອ ແລະ ພວກເຈົ້າພຽງແຕ່ພະຍາຍາມຢ່າງສຸດຂີດເພື່ອປິດບັງແນວຄິດເຫຼົ່ານັ້ນ, ບໍ່ເປີດເຜີຍພວກມັນຢ່າງງ່າຍດາຍ. ພວກເຈົ້າບໍ່ຍອມຮັບພາລະກິດໃໝ່ຢ່າງຈິງໃຈ ແລະ ພວກເຈົ້າບໍ່ວາງແຜນທີ່ຈະປະຖິ້ມແນວຄິດເດີມຂອງພວກເຈົ້າ; ພວກເຈົ້າມີປັດຊະຍາສຳລັບການດຳລົງຊີວິດຫຼາຍເກີນໄປ ແລະ ພວກມັນກໍມີຢູ່ຢ່າງຫຼວງຫຼາຍ. ພວກເຈົ້າບໍ່ປະຖິ້ມແນວຄິດເດີມຂອງພວກເຈົ້າ ແລະ ພວກເຈົ້າຈັດການກັບພາລະກິດໃໝ່ຢ່າງບໍ່ເຕັມໃຈ. ຫົວໃຈຂອງພວກເຈົ້າຊົ່ວຮ້າຍແທ້ໆ ແລະ ພວກເຈົ້າພຽງແຕ່ບໍ່ນຳບາດກ້າວແຫ່ງພາລະກິດໃໝ່ເຂົ້າສູ່ຫົວໃຈເລີຍ. ຄົນທີ່ບໍ່ເອົາຖ່ານແບບພວກເຈົ້າຈະສາມາດປະຕິບັດພາລະກິດແຫ່ງການເຜີຍແຜ່ຂ່າວປະເສີດໄດ້ບໍ? ພວກເຈົ້າຈະສາມາດຮັບພາລະກິດແຫ່ງການເຜີຍແຜ່ຂ່າວປະເສີດໄປທົ່ວທັງຈັກກະວານໄດ້ບໍ? ການປະຕິບັດເຫຼົ່ານີ້ຂອງພວກເຈົ້າກຳລັງຢຸດພວກເຈົ້າບໍ່ໃຫ້ປ່ຽນແປງອຸປະນິໄສຂອງພວກເຈົ້າ ແລະ ບໍ່ໃຫ້ຮູ້ຈັກພຣະເຈົ້າ. ຖ້າພວກເຈົ້າຍັງສືບຕໍ່ເປັນແບບນີ້ ພວກເຈົ້າກໍຈະຖືກກຳຈັດຢ່າງແນ່ນອນ.

ພວກເຈົ້າຕ້ອງຮູ້ຈັກຈຳແນກພາລະກິດຂອງພຣະເຈົ້າຈາກພາລະກິດຂອງມະນຸດ. ເຈົ້າສາມາດເຫັນຫຍັງໃນພາລະກິດຂອງມະນຸດ? ມີອົງປະກອບຫຼາຍຢ່າງກ່ຽວກັບປະສົບການຂອງມະນຸດໃນພາລະກິດຂອງເຂົາ; ສິ່ງທີ່ມະນຸດສະແດງອອກກໍຄືສິ່ງທີ່ເຂົາເປັນ. ພາລະກິດຂອງພຣະເຈົ້າເອງກໍສະແດງ

ອອກເຖິງສິ່ງທີ່ພຣະອົງເປັນ ແຕ່ສິ່ງທີ່ພຣະອົງເປັນແມ່ນແຕກຕ່າງຈາກສິ່ງທີ່ມະນຸດເປັນ. ສິ່ງທີ່ມະນຸດເປັນແມ່ນຕົວແທນຂອງປະສົບການ ແລະ ຊີວິດຂອງມະນຸດ (ສິ່ງທີ່ມະນຸດພະເຊີນ ຫຼື ພົບພໍ້ໃນຊີວິດຂອງເຂົາ ຫຼື ປັດຊະຍາສຳລັບການດຳລົງຊີວິດທີ່ເຂົາມີ) ແລະ ຄົນທີ່ມີຊີວິດໃນສະພາບແວດລ້ອມທີ່ແຕກຕ່າງກັນກໍສະແດງເຖິງການເປັນຢູ່ທີ່ແຕກຕ່າງກັນ. ບໍ່ວ່າເຈົ້າມີປະສົບການໃນສັງຄົມ ຫຼື ບໍ່ ແລະ ເຈົ້າມີຊີວິດຢ່າງແທ້ຈິງແນວໃດໃນຄອບຄົວຂອງເຈົ້າ ແລະ ມີປະສົບການໃນຄອບຄົວຂອງເຈົ້າແນວໃດແມ່ນສາມາດເຫັນໄດ້ຈາກສິ່ງທີ່ເຈົ້າສະແດງອອກ, ໃນຂະນະທີ່ເຈົ້າບໍ່ສາມາດເຫັນຈາກພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດວ່າ ພຣະອົງຈະມີປະສົບການໃນສັງຄົມ ຫຼື ບໍ່. ພຣະອົງຮັບຮູ້ເຖິງທາດແທ້ຂອງມະນຸດເປັນຢ່າງດີ ແລະ ສາມາດເປີດເຜີຍການປະຕິບັດທຸກປະເພດທີ່ເປັນຂອງຄົນທຸກປະເພດ. ພຣະອົງຍິ່ງດີກວ່າໃນການເປີດເຜີຍອຸປະນິໄສທີ່ເສື່ອມຊາມ ແລະ ພຶດຕິກຳທີ່ເປັນກະບົດຂອງມະນຸດ. ພຣະອົງບໍ່ມີຊີວິດຢູ່ທ່າມກາງຄົນໃນໂລກ, ແຕ່ພຣະອົງຮັບຮູ້ເຖິງທຳມະຊາດຂອງມະນຸດ ແລະ ຄວາມເສື່ອມຊາມທັງໝົດຂອງຄົນໃນໂລກ. ນີ້ຄືສິ່ງທີ່ພຣະອົງເປັນ. ເຖິງແມ່ນວ່າ ພຣະອົງບໍ່ຈັດການກັບໂລກ, ພຣະອົງກໍຮູ້ຈັກກົດລະບຽບໃນການຈັດການກັບໂລກ ຍ້ອນພຣະອົງເຂົ້າໃຈເຖິງທຳມະຊາດຂອງມະນຸດຢ່າງສົມບູນ. ພຣະອົງຮູ້ຈັກກ່ຽວກັບພາລະກິດຂອງພຣະວິນຍານທີ່ຕາຂອງມະນຸດບໍ່ສາມາດເຫັນໄດ້ ແລະ ຫູຂອງມະນຸດບໍ່ສາມາດໄດ້ຍິນ ທັງໃນປັດຈຸບັນ ແລະ ໃນອະດີດ. ນີ້ລວມເຖິງສະຕິປັນຍາທີ່ບໍ່ແມ່ນປັດຊະຍາສຳລັບການດຳລົງຊີວິດ ແລະ ສິ່ງອັດສະຈັນທີ່ໃຫ້ຜູ້ຄົນຢັ່ງເຖິງໄດ້ຍາກ. ນີ້ຄືສິ່ງທີ່ພຣະອົງເປັນ ນັ້ນກໍຄື ເປີດເຜີຍກັບຜູ້ຄົນ ແລະ ຍັງລີ້ລັບຈາກຜູ້ຄົນ. ສິ່ງທີ່ພຣະອົງສະແດງອອກບໍ່ແມ່ນສິ່ງທີ່ຄົນພິເສດເປັນ, ແຕ່ເປັນຄຸນລັກສະນະໂດຍທຳມະຊາດ ແລະ ການເປັນຢູ່ຂອງພຣະວິນຍານ. ພຣະອົງບໍ່ໄດ້ເດີນທາງອ້ອມໂລກ ແຕ່ຮູ້ຈັກທຸກສິ່ງກ່ຽວກັບໂລກ. ພຣະອົງພົບພໍ້ "ລີງໂທນ" ຜູ້ເຊິ່ງບໍ່ມີຄວາມຮູ້ ຫຼື ຄວາມເຂົ້າໃຈ, ແຕ່ພຣະອົງສະແດງພຣະທຳທີ່ຢູ່ເໜືອກວ່າຄວາມຮູ້ ແລະ ເໜືອກວ່າມະນຸດທີ່ຍິ່ງໃຫຍ່. ພຣະອົງມີຊີວິດຢູ່ທ່າມກາງກຸ່ມຄົນທີ່ໂງ່ຈ້າ ແລະ ບໍ່ມີຄວາມຮູ້ສຶກ ຜູ້ເຊິ່ງບໍ່ມີຄວາມເປັນມະນຸດ ແລະ ຜູ້ເຊິ່ງບໍ່ເຂົ້າໃຈທຳນຽມ ແລະ ຊີວິດຂອງມະນຸດ, ແຕ່ພຣະອົງສາມາດຮຽກຮ້ອງໃຫ້ມະນຸດຊາດໃຊ້ຊີວິດຕາມຄວາມເປັນມະນຸດທຳມະດາໄດ້, ໃນຂະນະດຽວກັນກໍເປີດເຜີຍພື້ນຖານ ແລະ ຄວາມເປັນມະນຸດທີ່ຕໍ່າຕ້ອຍຂອງມະນຸດຊາດ. ທຸກສິ່ງນີ້ແມ່ນສິ່ງທີ່ພຣະອົງເປັນ ເຊິ່ງສູງກວ່າຄົນທີ່ມີເນື້ອໜັງ ແລະ ເລືອດເນື້ອ. ສຳລັບພຣະອົງ ມັນບໍ່ຈຳເປັນທີ່ຕ້ອງພະເຊີນກັບຊີວິດສັງຄົມທີ່ຊັບຊ້ອນ, ຫຍຸ້ງຍາກ ແລະ ສົກກະປົກເພື່ອປະຕິບັດພາລະກິດທີ່ພຣະອົງຕ້ອງປະຕິບັດ ແລະ ເປີດເຜີຍເຖິງທາດແທ້ຂອງມະນຸດຊາດທີ່ເສື່ອມຊາມຢ່າງທົ່ວເຖິງ. ຊີວິດສັງຄົມທີ່ສົກກະປົກບໍ່ໄດ້ສັ່ງສອນເນື້ອໜັງຂອງພຣະອົງ. ພາລະກິດ ແລະ ພຣະທຳຂອງພຣະອົງພຽງແຕ່ເປີດເຜີຍການບໍ່ເຊື່ອຟັງຂອງມະນຸດ ແລະ ບໍ່ໄດ້ຈັດກຽມມະນຸດດ້ວຍປະສົບການ ແລະ ບົດຮຽນໃນການຈັດການກັບໂລກນີ້. ພຣະອົງບໍ່ຕ້ອງສືບສວນສັງຄົມ ຫຼື ຄອບຄົວຂອງມະນຸດ ເມື່ອພຣະອົງຈັດຕຽມມະນຸດດ້ວຍຊີວິດ. ການເປີດເຜີຍ ແລະ ການພິພາກສາມະນຸດບໍ່ແມ່ນການສະແດງອອກເຖິງປະສົບການຂອງເນື້ອໜັງຂອງພຣະອົງ; ມັນເປັນການເປີດເຜີຍເຖິງຄວາມບໍ່ຊອບທຳຂອງມະນຸດຫຼັງຈາກທີ່ຮູ້ຈັກຄວາມບໍ່ເຊື່ອຟັງຂອງມະນຸດເປັນເວລາ

ດົນນານ ແລະ ກຽດຊັງຄວາມເສື່ອມຊາມຂອງມະນຸດຊາດ. ພາລະກິດທີ່ພຣະອົງປະຕິບັດທັງໝົດແມ່ນການເປີດເຜີຍອຸປະນິໄສໃຫ້ກັບມະນຸດ ແລະ ສະແດງເຖິງການເປັນຢູ່ຂອງພຣະອົງ. ມີພຽງແຕ່ພຣະເຈົ້າທີ່ສາມາດປະຕິບັດພາລະກິດນີ້, ມັນບໍ່ແມ່ນສິ່ງທີ່ຄົນມີເນື້ອໜັງ ແລະ ເລືອດເນື້ອສາມາດເຮັດໃຫ້ສຳເລັດໄດ້. ຈາກພາລະກິດຂອງພຣະອົງ ມະນຸດບໍ່ສາມາດບອກໄດ້ວ່າ ພຣະອົງເປັນຄົນປະເພດໃດ. ມະນຸດຍັງບໍ່ສາມາດຈັດແບ່ງພຣະອົງໃຫ້ເປັນຄົນປະເພດທີ່ຖືກສ້າງບົນພື້ນຖານແຫ່ງພາລະກິດຂອງພຣະອົງ. ສິ່ງທີ່ພຣະອົງເປັນຍັງເຮັດໃຫ້ພຣະອົງບໍ່ສາມາດຖືກຈັດແບ່ງໃຫ້ເປັນຄົນປະເພດທີ່ຖືກສ້າງ. ມະນຸດພຽງແຕ່ສາມາດພິຈາລະນາໃຫ້ພຣະອົງເປັນສິ່ງທີ່ບໍ່ແມ່ນມະນຸດ, ແຕ່ບໍ່ຮູ້ຈັກຈັດແບ່ງພຣະອົງຢູ່ໃນປະເພດໃດ, ສະນັ້ນ ມະນຸດຈຶ່ງຖືກບັງຄັບໃຫ້ຈັດພຣະອົງຢູ່ໃນປະເພດຂອງພຣະເຈົ້າ. ມັນບໍ່ສົມເຫດສົມຜົນສຳລັບມະນຸດທີ່ຈະເຮັດແບບນີ້, ຍ້ອນພຣະເຈົ້າໄດ້ສຳເລັດພາລະກິດຫຼາຍຢ່າງທ່າມກາງຜູ້ຄົນ ເຊິ່ງມະນຸດບໍ່ສາມາດເຮັດໄດ້.

ພາລະກິດທີ່ພຣະເຈົ້າປະຕິບັດບໍ່ໄດ້ເປັນຕົວແທນໃຫ້ແກ່ປະສົບການຂອງເນື້ອໜັງຂອງພຣະອົງ; ພາລະກິດທີ່ມະນຸດປະຕິບັດເປັນຕົວແທນໃຫ້ແກ່ປະສົບການຂອງມະນຸດ. ທຸກຄົນເວົ້າກ່ຽວກັບປະສົບການສ່ວນຕົວຂອງພວກເຂົາ. ພຣະເຈົ້າສາມາດສະແດງຄວາມຈິງໂດຍກົງ, ໃນຂະນະທີ່ມະນຸດພຽງແຕ່ສາມາດສະແດງປະສົບການທີ່ສອດຄ່ອງກັບການຜະເຊີນກັບຄວາມຈິງຂອງເຂົາເທົ່ານັ້ນ. ພາລະກິດຂອງພຣະເຈົ້າບໍ່ມີກົດລະບຽບ ແລະ ບໍ່ຢູ່ພາຍໃຕ້ເວລາ ຫຼື ຂໍ້ຈຳກັດທາງພູມສາດ. ພຣະອົງສາມາດສະແດງສິ່ງທີ່ພຣະອົງເປັນໃນເວລາໃດກໍໄດ້, ຢູ່ໃສກໍໄດ້. ພຣະອົງປະຕິບັດພາລະກິດດັ່ງທີ່ພຣະອົງພໍໃຈ. ພາລະກິດຂອງມະນຸດມີເງື່ອນໄຂ ແລະ ບໍລິບົດ; ຫາກປາສະຈາກສິ່ງເຫຼົ່ານັ້ນ ເຂົາກໍບໍ່ສາມາດປະຕິບັດພາລະກິດ ແລະ ບໍ່ສາມາດສະແດງຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າໄດ້ ຫຼື ປະສົບການຂອງເຂົາທີ່ກ່ຽວກັບຄວາມຈິງ. ເພື່ອທີ່ຈະບອກວ່າສິ່ງໃດສິ່ງໜຶ່ງແມ່ນພາລະກິດຂອງພຣະເຈົ້າເອງ ຫຼື ພາລະກິດຂອງມະນຸດ, ເຈົ້າພຽງແຕ່ຕ້ອງປຽບທຽບຄວາມແຕກຕ່າງລະຫວ່າງພາລະກິດເຫຼົ່ານັ້ນ. ຖ້າບໍ່ມີພາລະກິດທີ່ເຮັດໃຫ້ສຳເລັດໂດຍພຣະເຈົ້າເອງ ແລະ ມີພຽງແຕ່ພາລະກິດຂອງມະນຸດ, ເຈົ້າຈະຮູ້ຈັກຢ່າງງ່າຍດາຍວ່າ ການສັ່ງສອນຂອງມະນຸດນັ້ນສູງສົ່ງ, ນອກເໜືອຄວາມສາມາດຂອງຄົນໃດຄົນໜຶ່ງ; ນໍ້າສຽງໃນການເວົ້າຂອງພວກເຂົາ, ຫຼັກການຂອງພວກເຂົາໃນການເວົ້າ ແລະ ວິທີການປະຕິບັດພາລະກິດທີ່ມີປະສົບການ ແລະ ໝັ້ນຄົງຂອງພວກເຂົາແມ່ນຢູ່ນອກເໜືອການຢັ່ງເຖິງຂອງຄົນອື່ນ. ພວກເຈົ້າທຸກຄົນຍົກຍ້ອງຄົນເຫຼົ່ານີ້ທີ່ມີຄວາມສາມາດດີ ແລະ ຄວາມຮູ້ອັນສູງສົ່ງ, ແຕ່ເຈົ້າບໍ່ສາມາດເຫັນຈາກພາລະກິດ ແລະ ພຣະທຳຂອງພຣະເຈົ້າວ່າ ຄວາມເປັນມະນຸດຂອງພຣະອົງສູງສົ່ງພຽງໃດ. ກົງກັນຂ້າມ ພຣະອົງທຳມະດາ ແລະ ເມື່ອປະຕິບັດພາລະກິດ ພຣະອົງກໍທຳມະດາ ແລະ ເປັນຈິງ ແຕ່ບໍ່ສາມາດວັດແທກໄດ້ໂດຍມະນຸດ, ເຊິ່ງດ້ວຍເຫດນັ້ນຈຶ່ງເຮັດໃຫ້ຄົນຮູ້ສຶກເຄົາລົບນັບຖືພຣະອົງ. ບາງເທື່ອ ປະສົບການຂອງບຸກຄົນໃດໜຶ່ງໃນພາລະກິດຂອງເຂົາກໍກ້າວໜ້າຢ່າງຍິ່ງ ຫຼື ຈິນຕະນາການ ແລະ ການໃຫ້ເຫດຜົນຂອງເຂົາກໍກ້າວໜ້າຢ່າງຍິ່ງ, ແລະ ຄວາມເປັນມະນຸດຂອງເຂົາກໍດີເປັນພິເສດ; ລັກສະນະດັ່ງກ່າວພຽງແຕ່ສາມາດໄດ້ຮັບການເຄົາລົບຂອງຜູ້ຄົນ ແຕ່ບໍ່ສາມາດປຸກຄວາມເຄົາລົບຢຳເກງ

ແລະ ຄວາມຢ້ານກົວຂອງພວກເຂົາໄດ້. ທຸກຄົນເຄົາລົບຄົນທີ່ສາມາດປະຕິບັດພາລະກິດໄດ້ເປັນຢ່າງດີ, ຄົນທີ່ມີປະສົບການຢ່າງເລິກເຊິ່ງເປັນພິເສດ ແລະ ຄົນທີ່ສາມາດປະຕິບັດຄວາມຈິງ ແຕ່ຜູ້ຄົນດັ່ງກ່າວບໍ່ສາມາດດຶງດູດຄວາມເຄົາລົບຢຳເກງໄດ້ຈັກເທື່ອ, ມີພຽງຄວາມເຄົາລົບ ແລະ ຄວາມອິດສາ. ແຕ່ຄົນທີ່ໄດ້ພະເຊີນກັບພາລະກິດຂອງພຣະເຈົ້າບໍ່ເຄົາລົບພຣະເຈົ້າ, ກົງກັນຂ້າມ ພວກເຂົາຮູ້ສຶກວ່າ ພາລະກິດຂອງພຣະອົງຢູ່ນອກເໜືອການຢັ່ງເຖິງຂອງມະນຸດ ແລະ ບໍ່ສາມາດຢັ່ງເຖິງໄດ້ໂດຍມະນຸດຄົນໃດ, ມັນເປັນພາລະກິດທີ່ສົດໃໝ່ ແລະ ອັດສະຈັນ. ເມື່ອຜູ້ຄົນພະເຊີນກັບພາລະກິດຂອງພຣະເຈົ້າ, ຄວາມຮູ້ທຳອິດທີ່ພວກເຂົາມີກ່ຽວກັບພຣະອົງແມ່ນພຣະອົງບໍ່ສາມາດຢັ່ງເຖິງໄດ້, ມີສະຕິປັນຍາ ແລະ ອັດສະຈັນ ແລະ ພວກເຂົາກໍເຄົາລົບພຣະອົງຢ່າງບໍ່ມີສະຕິ ແລະ ຮູ້ສຶກເຖິງຄວາມເລິກລັບຂອງພາລະກິດທີ່ພຣະອົງປະຕິບັດ, ເຊິ່ງຢູ່ນອກເໜືອການຢັ່ງເຖິງຂອງຈິດໃຈຂອງມະນຸດ. ຜູ້ຄົນພຽງແຕ່ຢາກສາມາດບັນລຸຕາມເງື່ອນໄຂຂອງພຣະອົງ, ເພື່ອເຮັດໃຫ້ເປັນທີ່ພໍໃຈຕາມຄວາມປາຖະໜາຂອງພຣະອົງ; ພວກເຂົາບໍ່ປາຖະໜາທີ່ຈະເປັນໃຫຍ່ກວ່າພຣະອົງ, ຍ້ອນພາລະກິດທີ່ພຣະອົງປະຕິບັດແມ່ນຢູ່ເໜືອຄວາມຄິດ ແລະ ຈິນຕະນາການຂອງມະນຸດຢູ່ແລ້ວ ແລະ ບໍ່ມີມະນຸດຄົນໃດສາມາດປະຕິບັດແທນພຣະອົງໄດ້. ແມ່ນແຕ່ມະນຸດເອງຍັງບໍ່ຮູ້ຈັກເຖິງຄວາມຂາດຕົກບົກພ່ອງຂອງເຂົາເອງເລີຍ, ແຕ່ພຣະເຈົ້າໄດ້ເປີດເສັ້ນທາງໃໝ່ ແລະ ມາເພື່ອນຳມະນຸດເຂົ້າສູ່ໂລກທີ່ໃໝ່ ແລະ ສວຍງາມກວ່າເກົ່າ ແລະ ເພື່ອມະນຸດຊາດຈະມີຄວາມກ້າວໜ້າ ແລະ ມີການເລີ່ມຕົ້ນໃໝ່. ສິ່ງທີ່ມະນຸດຮູ້ສຶກກ່ຽວກັບພຣະອົງບໍ່ແມ່ນການເຄົາລົບ ຫຼື ກົງກັນຂ້າມ ບໍ່ແມ່ນພຽງການເຄົາລົບ. ປະສົບການທີ່ເລິກເຊິ່ງທີ່ສຸດຂອງພວກເຂົາແມ່ນຄວາມເຄົາລົບຢຳເກງ ແລະ ຄວາມຮັກ; ຄວາມຮູ້ສຶກຂອງພວກເຂົາກໍຄືພຣະເຈົ້ານັ້ນອັດສະຈັນຢ່າງແທ້ຈິງ. ພຣະອົງປະຕິບັດພາລະກິດທີ່ມະນຸດບໍ່ສາມາດປະຕິບັດໄດ້, ກ່າວໃນສິ່ງທີ່ມະນຸດບໍ່ສາມາດກ່າວໄດ້. ຄົນທີ່ໄດ້ພະເຊີນກັບພາລະກິດຂອງພຣະອົງພະເຊີນກັບຄວາມຮູ້ສຶກທີ່ບໍ່ສາມາດອະທິບາຍໄດ້ຢູ່ຕະຫຼອດເວລາ. ຄົນທີ່ມີປະສົບການຢ່າງເລິກເຊິ່ງກໍສາມາດເຂົ້າໃຈຄວາມຮັກຂອງພຣະເຈົ້າ; ພວກເຂົາສາມາດຮູ້ສຶກເຖິງຄວາມເປັນຕາຮັກຂອງພຣະອົງ, ຮູ້ສຶກວ່າພາລະກິດຂອງພຣະອົງມີສະຕິປັນຍາຫຼາຍ, ອັດສະຈັນຫຼາຍ ແລະ ດ້ວຍວິທີນີ້ຈຶ່ງກໍ່ໃຫ້ເກີດລິດອຳນາດທີ່ບໍ່ມີສິ້ນສຸດທ່າມກາງພວກເຂົາ. ມັນບໍ່ແມ່ນຄວາມຢ້ານກົວ ຫຼື ຄວາມຮັກບາງຄັ້ງບາງຄາວ ແລະ ຄວາມນັບຖື, ແຕ່ເປັນຄວາມຮູ້ສຶກອັນເລິກເຊິ່ງເຖິງຄວາມເຫັນອົກເຫັນໃຈຂອງພຣະເຈົ້າທີ່ມີສຳລັບມະນຸດ ແລະ ຄວາມອົດທົນຕໍ່ເຂົາ. ເຖິງຢ່າງໃດກໍຕາມ ຄົນທີ່ໄດ້ພະເຊີນກັບການຂ້ຽນຕີ ແລະ ການພິພາກສາຂອງພຣະອົງກໍຮູ້ສຶກເຖິງສະຫງ່າງາມຂອງພຣະອົງ ແລະ ພຣະອົງບໍ່ສາມາດທົນຕໍ່ການເຮັດຜິດໄດ້. ແມ່ນແຕ່ຄົນທີ່ໄດ້ພະເຊີນກັບພາລະກິດຂອງພຣະອົງຫຼາຍຢ່າງກໍຍັງບໍ່ສາມາດຢັ່ງເຖິງພຣະອົງໄດ້; ທຸກຄົນທີ່ເຄົາລົບພຣະອົງຢ່າງແທ້ຈິງກໍຮູ້ຈັກວ່າ ພາລະກິດຂອງພຣະອົງບໍ່ສອດຄ່ອງກັບແນວຄິດຂອງມະນຸດ ແຕ່ຂັດກັບແນວຄິດຂອງພວກເຂົາຕະຫຼອດເວລາ. ພຣະອົງບໍ່ຕ້ອງການຄົນໃຫ້ເຄົາລົບເຂົາໂດຍສິ້ນເຊີງ ຫຼື ສະແດງໃຫ້ເຫັນເຖິງການປາກົດຕົວຂອງການຍອມຢູ່ພາຍໃຕ້ພຣະອົງ; ກົງກັນຂ້າມ ພວກເຂົາຄວນບັນລຸຄວາມເຄົາລົບຢ່າງແທ້ຈິງ ແລະ ການຍອມຢ່າງແທ້ຈິງ. ໃນພາລະກິດທີ່ຫຼວງຫຼາຍຂອງພຣະອົງ ຄົນໃດທີ່ມີປະສົບການທີ່ແທ້ຈິງຮູ້ສຶກ

ເຄົາລົບສຳລັບພຣະອົງ, ເຊິ່ງຢູ່ສູງກວ່າການຍົກຍ້ອງ. ຄົນທີ່ໄດ້ເຫັນອຸປະນິໄສຂອງພຣະອົງຍ້ອນພາລະກິດແຫ່ງການຂ້ຽນຕີ ແລະ ການພິພາກສາ ແລະ ດ້ວຍເຫດນັ້ນ ພວກເຂົາກໍເຄົາລົບພຣະອົງໃນຫົວໃຈຂອງພວກເຂົາ. ພຣະເຈົ້າສົມຄວນແກ່ການເຄົາລົບ ແລະ ເຊື່ອຟັງ, ຍ້ອນການເປັນຢູ່ຂອງພຣະອົງ ແລະ ອຸປະນິໄສຂອງພຣະອົງບໍ່ຄືກັບສິ່ງທີ່ຖືກສ້າງ ແລະ ຢູ່ເໜືອສິ່ງທີ່ຖືກສ້າງ. ພຣະເຈົ້າເປັນຢູ່ເອງ ແລະ ຢູ່ຊົ່ວນິດນິລັນດອນ, ພຣະອົງບໍ່ແມ່ນສິ່ງທີ່ຖືກສ້າງ ແລະ ມີແຕ່ພຣະອົງທີ່ສົມຄວນແກ່ການເຄົາລົບ ແລະ ຄວາມເຊື່ອຟັງ; ມະນຸດບໍ່ມີຄຸນສົມບັດສຳລັບສິ່ງນີ້. ສະນັ້ນ ທຸກຄົນທີ່ໄດ້ຜະເຊີນກັບພາລະກິດຂອງພຣະອົງ ແລະ ຮູ້ຈັກພຣະອົງຢ່າງແທ້ຈິງກໍຮູ້ສຶກເຄົາລົບຕໍ່ພຣະອົງ. ເຖິງຢ່າງໃດກໍຕາມ ຄົນທີ່ບໍ່ປະຖິ້ມແນວຄິດຂອງພວກເຂົາກ່ຽວກັບພຣະອົງ, ນັ້ນກໍຄື ຄົນທີ່ບໍ່ນັບຖືພຣະອົງເປັນພຣະເຈົ້າເລີຍນັ້ນແມ່ນບໍ່ມີຄວາມເຄົາລົບໃດເລີຍຕໍ່ພຣະອົງ ແລະ ເຖິງແມ່ນວ່າພວກເຂົາຕິດຕາມພຣະອົງ ພວກເຂົາບໍ່ໄດ້ຖືກເອົາຊະນະ; ພວກເຂົາເປັນຄົນທີ່ບໍ່ເຊື່ອຟັງໂດຍທຳມະຊາດ. ສິ່ງທີ່ພຣະອົງໝາຍເຖິງໃນການບັນລຸໂດຍປະຕິບັດພາລະກິດແບບນັ້ນກໍແມ່ນເພື່ອສິ່ງທີ່ຖືກສ້າງທັງໝົດມີຫົວໃຈແຫ່ງການເຄົາລົບພຣະຜູ້ສ້າງ, ນະມັດສະການພຣະອົງ ແລະ ຍອມຢູ່ພາຍໃຕ້ອຳນາດຂອງພຣະອົງໂດຍບໍ່ມີເງື່ອນໄຂ. ນີ້ຄືຜົນສຸດທ້າຍທີ່ທຸກພາລະກິດຂອງພຣະອົງມຸ່ງໝາຍທີ່ຈະເຮັດໃຫ້ສຳເລັດ. ຖ້າຫາກຄົນທີ່ໄດ້ຜະເຊີນພາລະກິດດັ່ງກ່າວບໍ່ເຄົາລົບພຣະເຈົ້າແມ່ນແຕ່ໜ້ອຍດຽວ ແລະ ຖ້າການບໍ່ເຊື່ອຟັງຂອງພວກເຂົາໃນອະດີດບໍ່ປ່ຽນແປງເລີຍ, ແລ້ວພວກເຂົາກໍຈະຖືກກຳຈັດຢ່າງແນ່ນອນ. ຖ້າຫາກທ່າທີຂອງຄົນໃດໜຶ່ງທີ່ມີຕໍ່ພຣະເຈົ້າເປັນພຽງການຍົກຍ້ອງພຣະອົງ ຫຼື ສະແດງຄວາມນັບຖືຢູ່ໄກໆ ແລະ ບໍ່ໄດ້ຮັກແມ່ນແຕ່ໜ້ອຍດຽວ, ແລ້ວນີ້ກໍຄືຜົນທີ່ຄົນປາສະຈາກຫົວໃຈແຫ່ງຄວາມຮັກສຳລັບພຣະເຈົ້າໄດ້ມາເຖິງ ແລະ ຄົນນັ້ນຂາດສະພາບທີ່ຈະຖືກເຮັດໃຫ້ສົມບູນ. ຖ້າພາລະກິດຢ່າງຫຼວງຫຼາຍບໍ່ສາມາດໄດ້ຮັບຄວາມຮັກທີ່ແທ້ຈິງຈາກບຸກຄົນໃດໜຶ່ງ, ແລ້ວບຸກຄົນນັ້ນບໍ່ໄດ້ຮັບພຣະເຈົ້າ ແລະ ບໍ່ສະແຫວງຫາຄວາມຈິງຢ່າງແທ້ຈິງ. ຄົນທີ່ບໍ່ຮັກພຣະເຈົ້າກໍບໍ່ຮັກຄວາມຈິງ ແລະ ດ້ວຍເຫດນັ້ນ ກໍບໍ່ສາມາດຮັບພຣະເຈົ້າໄດ້ແຮງໄກທີ່ຈະຮັບເອົາການຍິນຍອມຈາກພຣະເຈົ້າ. ຄົນດັ່ງກ່າວ ບໍ່ວ່າພວກເຂົາຈະຜະເຊີນກັບພາລະກິດຂອງພຣະວິນຍານບໍລິສຸດແນວໃດກໍຕາມ ແລະ ບໍ່ວ່າພວກເຂົາຈະຜະເຊີນກັບການພິພາກສາແນວໃດກໍຕາມ ແມ່ນບໍ່ສາມາດເຄົາລົບພຣະເຈົ້າໄດ້. ນີ້ແມ່ນຄົນທີ່ມີທຳມະຊາດທີ່ບໍ່ສາມາດປ່ຽນແປງໄດ້, ເຊິ່ງເປັນຄົນທີ່ມີອຸປະນິໄສທີ່ຊົ່ວຮ້າຍທີ່ສຸດ. ທຸກຄົນທີ່ບໍ່ເຄົາລົບພຣະເຈົ້າຕ້ອງຖືກກຳຈັດ, ເປັນຈຸດມຸ່ງໝາຍຂອງການລົງໂທດ ແລະ ຈະຖືກລົງໂທດຄືກັບຄົນທີ່ເຮັດສິ່ງຊົ່ວຮ້າຍ, ຍິ່ງທົນທຸກຫຼາຍກວ່າຄົນທີ່ໄດ້ເຮັດສິ່ງທີ່ບໍ່ຊອບທຳ.

# ການຮູ້ຈັກພາລະກິດສາມຂັ້ນຕອນຂອງພຣະເຈົ້າ ແມ່ນເສັ້ນທາງໄປສູ່ການຮູ້ຈັກພຣະເຈົ້າ

ພາລະກິດການຄຸ້ມຄອງມະນຸດຊາດແມ່ນຖືກຈັດແບ່ງອອກເປັນສາມຂັ້ນຕອນເຊິ່ງກໍໝາຍຄວາມວ່າ ພາລະກິດແຫ່ງການໄຖ່ມະນຸດຊາດຖືກແບ່ງອອກເປັນສາມຂັ້ນຕອນ. ສາມຂັ້ນຕອນນີ້ບໍ່ລວມເຖິງພາລະກິດແຫ່ງການສ້າງໂລກ ແຕ່ກົງກັນຂ້າມ ພວກມັນແມ່ນພາລະກິດສາມຂັ້ນຕອນຂອງຍຸກແຫ່ງພຣະບັນຍັດ, ຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງອານາຈັກ. ພາລະກິດແຫ່ງການສ້າງໂລກແມ່ນພາລະກິດແຫ່ງການກໍ່ໃຫ້ເກີດບັນດາມວນມະນຸດຊາດ. ມັນບໍ່ແມ່ນພາລະກິດແຫ່ງການໄຖ່ມະນຸດຊາດ ແລະ ບໍ່ມີສ່ວນພົວພັນກັບພາລະກິດແຫ່ງການໄຖ່ມະນຸດຊາດ ຍ້ອນໃນຕອນທີ່ໂລກຖືກສ້າງຂຶ້ນນັ້ນ ມະນຸດຊາດຍັງບໍ່ໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ຕ້ອງມີການປະຕິບັດພາລະກິດແຫ່ງການໄຖ່ມະນຸດຊາດ. ພາລະກິດແຫ່ງການໄຖ່ມະນຸດຊາດພຽງແຕ່ເລີ່ມຕົ້ນຂຶ້ນເມື່ອມະນຸດຊາດໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ດ້ວຍເຫດນັ້ນ ພາລະກິດແຫ່ງການຄຸ້ມຄອງມະນຸດຊາດກໍພຽງແຕ່ເກີດຂຶ້ນເມື່ອມະນຸດຊາດຖືກເຮັດໃຫ້ເສື່ອມຊາມແລ້ວເຊັ່ນກັນ. ສາມາດເວົ້າໄດ້ອີກວ່າ ການຄຸ້ມຄອງມະນຸດຂອງພຣະເຈົ້າເລີ່ມຕົ້ນຈາກຜົນຂອງພາລະກິດແຫ່ງການໄຖ່ມະນຸດຊາດ ແລະ ບໍ່ໄດ້ເກີດມາຈາກພາລະກິດແຫ່ງການສ້າງໂລກ. ພຽງແຕ່ຫຼັງຈາກທີ່ມະນຸດໄດ້ຮັບອຸປະນິໄສທີ່ເສື່ອມຊາມເທົ່ານັ້ນ ພາລະກິດແຫ່ງການຄຸ້ມຄອງກໍຈຶ່ງໄດ້ເກີດຂຶ້ນ ແລະ ດ້ວຍເຫດນັ້ນ ພາລະກິດແຫ່ງການຄຸ້ມຄອງມະນຸດຊາດຈຶ່ງປະກອບມີສາມສ່ວນ ແທນທີ່ຈະເປັນສີ່ສ່ວນ ຫຼື ສີ່ຍຸກ. ນີ້ແມ່ນວິທີການກ່າວເຖິງການຄຸ້ມຄອງມະນຸດຂອງພຣະເຈົ້າທີ່ຖືກຕ້ອງວິທີດຽວເທົ່ານັ້ນ. ເມື່ອຍຸກສຸດທ້າຍເຂົ້າໃກ້ຈຸດສິ້ນສຸດ, ພາລະກິດແຫ່ງການຄຸ້ມຄອງມະນຸດກໍຈະເຖິງຈຸດສິ້ນສຸດຢ່າງບໍລິບູນ. ການສິ້ນສຸດຂອງພາລະກິດແຫ່ງການຄຸ້ມຄອງໝາຍຄວາມວ່າ ພາລະກິດແຫ່ງການໄຖ່ມະນຸດຊາດຈະສຳເລັດລົງຢ່າງສົມບູນ ແລະ ດ້ວຍເຫດນັ້ນ ໄລຍະນີ້ກໍ່ຈະສິ້ນສຸດລົງສຳລັບມະນຸດຊາດ. ຖ້າປາສະຈາກພາລະກິດແຫ່ງການໄຖ່ບັນດາມວນມະນຸດຊາດ ພາລະກິດແຫ່ງການຄຸ້ມຄອງມະນຸດກໍຈະບໍ່ເກີດຂຶ້ນ ຫຼື ພາລະກິດສາມຂັ້ນຕອນກໍຈະບໍ່ມີຢູ່ເຊັ່ນດຽວກັນ. ແນ່ນອນຢູ່ແລ້ວທີ່ມັນເປັນຍ້ອນຄວາມຊົ່ວຊ້າຂອງມະນຸດຊາດ ແລະ ຍ້ອນມະນຸດຊາດຕ້ອງການຄວາມລອດພົ້ນຢ່າງຮີບດ່ວນ ຈຶ່ງເຮັດໃຫ້ພຣະເຢໂຮວາສິ້ນສຸດການສ້າງໂລກ ແລະ ເລີ່ມຕົ້ນພາລະກິດຂອງຍຸກແຫ່ງພຣະບັນຍັດ. ພາລະກິດແຫ່ງການຄຸ້ມຄອງມະນຸດເລີ່ມຕົ້ນຂຶ້ນຫຼັງຈາກຕອນນັ້ນເຊິ່ງໝາຍຄວາມວ່າ ພາລະກິດແຫ່ງການໄຖ່ມະນຸດໄດ້ເລີ່ມຕົ້ນຂຶ້ນຕັ້ງແຕ່ຕອນນັ້ນ. "ການຄຸ້ມຄອງມະນຸດຊາດ" ບໍ່ໄດ້ໝາຍເຖິງການນຳພາຊີວິດຂອງມະນຸດຊາດທີ່ຫາກໍຖືກສ້າງຂຶ້ນໃໝ່ເທິງແຜ່ນດິນໂລກ (ເຊິ່ງເວົ້າໄດ້ວ່າ ມະນຸດຊາດທີ່ຍັງບໍ່ໄດ້ເສື່ອມຊາມເທື່ອ). ກົງກັນຂ້າມ, ມັນເປັນຄວາມລອດພົ້ນຂອງມະນຸດຊາດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ ເຊິ່ງເວົ້າໄດ້ວ່າ ມັນເປັນການປ່ຽນແປງມະນຸດຊາດທີ່ເສື່ອມຊາມ. ນີ້ຄືຄວາມໝາຍຂອງ "ການຄຸ້ມຄອງມະນຸດຊາດ". ພາລະກິດແຫ່ງການໄຖ່ມະນຸດຊາດບໍ່ລວມເຖິງພາລະກິດແຫ່ງການສ້າງໂລກ ແລະ ດ້ວຍເຫດນັ້ນ ພາລະກິດແຫ່ງການຄຸ້ມຄອງມະນຸດຊາດ

ຍັງບໍ່ໄດ້ລວມເຖິງພາລະກິດແຫ່ງການສ້າງໂລກ ແຕ່ລວມເຖິງພາລະກິດສາມຂັ້ນຕອນທີ່ແຕກຕ່າງຈາກການສ້າງໂລກເທົ່ານັ້ນ. ເພື່ອທີ່ຈະເຂົ້າໃຈພາລະກິດແຫ່ງການຄຸ້ມຄອງມະນຸດຊາດ, ມັນຈຳເປັນທີ່ຈະຕ້ອງຮັບຮູ້ກ່ຽວກັບປະຫວັດສາດຂອງພາລະກິດສາມຂັ້ນຕອນ ເຊິ່ງນີ້ກໍຄືສິ່ງທີ່ທຸກຄົນຕ້ອງຮັບຮູ້ເພື່ອຈະໄດ້ຮັບການຊ່ວຍເຫຼືອໃຫ້ລອດພົ້ນ. ໃນຖານະທີ່ເປັນສິ່ງທີ່ມີຊີວິດຂອງພຣະເຈົ້າ, ພວກເຈົ້າຄວນຮັບຮູ້ວ່າ ມະນຸດຖືກສ້າງໂດຍພຣະເຈົ້າ ແລະ ພວກເຈົ້າຄວນຮັບຮູ້ເຖິງແຫຼ່ງກຳເນີດຂອງຄວາມເສື່ອມຊາມຂອງມະນຸດ ແລະ ຍິ່ງໄປກວ່ານັ້ນ ຂະບວນການແຫ່ງຄວາມລອດພົ້ນຂອງມະນຸດ. ຖ້າພວກເຈົ້າພຽງແຕ່ຮູ້ວິທີການປະຕິບັດໂດຍອີງຕາມຫຼັກການ ເພື່ອພະຍາຍາມຮັບຄວາມກະລຸນາຂອງພຣະເຈົ້າ ແຕ່ບໍ່ຮູ້ຈັກແມ່ນແຕ່ໜ້ອຍດຽວວ່າ ພຣະເຈົ້າຊ່ວຍຊີວິດມະນຸດຊາດແນວໃດ ຫຼື ແຫຼ່ງກຳເນີດຂອງຄວາມເສື່ອມຊາມຂອງມະນຸດ ແລ້ວນີ້ກໍຄືສິ່ງທີ່ພວກເຈົ້າຂາດໃນຖານະທີ່ເປັນສິ່ງທີ່ມີຊີວິດຂອງພຣະເຈົ້າ. ເຈົ້າບໍ່ຄວນພໍໃຈກັບພຽງແຕ່ການເຂົ້າໃຈຄວາມຈິງເຫຼົ່ານັ້ນ ເຊິ່ງເປັນສິ່ງທີ່ເຈົ້າສາມາດນຳເຂົ້າສູ່ການປະຕິບັດຕົວຈິງໄດ້ ໃນຂະນະທີ່ເມີນເສີຍຕໍ່ຂອບເຂດຂອງພາລະກິດການຄຸ້ມຄອງຂອງພຣະເຈົ້າທີ່ກວ້າງຂຶ້ນ ເຊິ່ງຖ້າມັນເປັນແນວນີ້ ເຈົ້າກໍຈະຄິດວ່າຕົນເອງຖືກຕະຫຼອດເວລາ. ພາລະກິດສາມຂັ້ນຕອນແມ່ນເບື້ອງໃນຂອງການຄຸ້ມຄອງມະນຸດຂອງພຣະເຈົ້າ, ການກຳເນີດພຣະກິດຕິຄຸນທົ່ວໂລກທັງປວງ, ຄວາມລຶກລັບທີ່ຍິ່ງໃຫຍ່ໃນບັນດາມວນມະນຸດຊາດ ແລະ ພວກມັນຍັງເປັນພື້ນຖານຂອງການເຜີຍແຜ່ຂ່າວປະເສີດ. ຖ້າເຈົ້າພຽງແຕ່ໃສ່ໃຈກັບຄວາມເຂົ້າໃຈຄວາມຈິງເລັກນ້ອຍທີ່ກ່ຽວຂ້ອງກັບຊີວິດຂອງເຈົ້າ ແລະ ບໍ່ຮູ້ກ່ຽວກັບສິ່ງນີ້, ບັນດາຄວາມລຶກລັບ ແລະ ນິມິດທີ່ຍິ່ງໃຫຍ່ທີ່ສຸດ ແລ້ວຊີວິດຂອງເຈົ້າຈະບໍ່ຄືກັບຜົນຜະລິດທີ່ບໍ່ສົມບູນບໍ ເຊິ່ງບໍ່ມີຫຍັງດີເລີຍ ນອກຈາກໄດ້ແຕ່ເບິ່ງ?

ຖ້າມະນຸດພຽງແຕ່ໃສ່ໃຈກັບການປະຕິບັດຕົວຈິງ ແລະ ເຫັນພາລະກິດຂອງພຣະເຈົ້າ ແລະ ສິ່ງທີ່ມະນຸດຄວນຮູ້ເປັນເລື່ອງທີ່ຮອງລົງມາ, ນີ້ບໍ່ແມ່ນການທີ່ລະມັດລະວັງ ແລະ ປະຢັດໃນສິ່ງເລັກນ້ອຍແຕ່ບໍ່ຮອບຄອບ ແລະ ຟຸ່ມເຟືອຍໃນສິ່ງທີ່ໃຫຍ່ບໍ? ສິ່ງທີ່ເຈົ້າຕ້ອງຮູ້, ເຈົ້າກໍຕ້ອງຮູ້; ສິ່ງທີ່ເຈົ້າຕ້ອງນຳເຂົ້າໃນການປະຕິບັດຕົວຈິງ, ເຈົ້າກໍຕ້ອງນຳເຂົ້າໃນການປະຕິບັດຕົວຈິງ. ມີພຽງແຕ່ຕອນນັ້ນ ທີ່ເຈົ້າຈະເປັນຄົນທີ່ຮູ້ຈັກວິທີການສະແຫວງຫາຄວາມຈິງ. ເມື່ອຮອດເວລາທີ່ເຈົ້າຕ້ອງເຜີຍແຜ່ພຣະກິດຕິຄຸນ, ຖ້າເຈົ້າພຽງແຕ່ສາມາດເວົ້າວ່າ ພຣະເຈົ້າເປັນພຣະເຈົ້າທີ່ຍິ່ງໃຫຍ່ ແລະ ທ່ຽງທຳ, ພຣະອົງເປັນພຣະເຈົ້າທີ່ສູງສຸດ, ພຣະເຈົ້າທີ່ບໍ່ມີມະນຸດທີ່ຍິ່ງໃຫຍ່ຄົນໃດສາມາດທຽບໄດ້ ແລະ ພຣະອົງເປັນພຣະເຈົ້າທີ່ບໍ່ມີໃຜຈະຢູ່ເໜືອ..., ຖ້າເຈົ້າພຽງແຕ່ສາມາດກ່າວຄຳເວົ້າທີ່ບໍ່ກ່ຽວຂ້ອງກັນ ໃນຂະນະທີ່ບໍ່ສາມາດກ່າວຄຳເວົ້າທີ່ມີຄວາມສຳຄັນຫຼາຍແທ້ໆ ແລະ ມີແກ່ນແທ້, ຖ້າເຈົ້າບໍ່ມີຫຍັງເວົ້າກ່ຽວກັບການຮູ້ຈັກພຣະເຈົ້າ ຫຼື ພາລະກິດຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ເຈົ້າບໍ່ສາມາດອະທິບາຍຄວາມຈິງ ຫຼື ຈັດກຽມສິ່ງທີ່ມະນຸດຂາດໄປ, ແລ້ວຄົນແບບເຈົ້າກໍຈະບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາໄດ້ເປັນຢ່າງດີ. ການເປັນພະຍານໃຫ້ກັບພຣະເຈົ້າ ແລະ ການເຜີຍແຜ່ພຣະກິດຕິຄຸນແຫ່ງອານາຈັກບໍ່ແມ່ນເລື່ອງທີ່ງ່າຍ. ກ່ອນອື່ນ ເຈົ້າຕ້ອງປະກອບດ້ວຍຄວາມຈິງ ແລະ ນິມິດທີ່ຕ້ອງເປັນທີ່ເຂົ້າໃຈໄດ້. ເມື່ອເຈົ້າມີຄວາມຊັດເຈນກ່ຽວກັບນິມິດ ແລະ ຄວາມຈິງໃນລັກສະນະທີ່ແຕກຕ່າງກັນຂອງພາລະກິດຂອງພຣະເຈົ້າ,

ແລະ ໃນຫົວໃຈຂອງເຈົ້າ ເຈົ້າກໍຈະມາຮູ້ຈັກພາລະກິດຂອງພຣະເຈົ້າ ແລະ ບໍ່ວ່າພຣະອົງຈະດຳເນີນຫຍັງກໍຕາມ ບໍ່ວ່າຈະເປັນການພິພາກສາທີ່ທ່ຽງທຳ ຫຼື ການກັ່ນຕອງມະນຸດ, ເຈົ້າຈະມີນິມິດທີ່ຍິ່ງໃຫຍ່ເປັນພື້ນຖານຂອງເຈົ້າ ແລະ ເຈົ້າມີຄວາມຈິງທີ່ຖືກຕ້ອງທີ່ສາມາດນຳເຂົ້າໃນການປະຕິບັດຕົວຈິງ ແລ້ວເຈົ້າຈະສາມາດຕິດຕາມພຣະເຈົ້າຈົນຮອດມື້ສຸດທ້າຍ. ເຈົ້າຕ້ອງຮູ້ວ່າ ບໍ່ວ່າພຣະເຈົ້າຈະປະຕິບັດພາລະກິດຫຍັງກໍຕາມ, ເຈດຕະນາຂອງພາລະກິດຂອງພຣະເຈົ້າຈະບໍ່ປ່ຽນແປງ, ຫົວໃຈຂອງພາລະກິດຂອງພຣະອົງຈະບໍ່ປ່ຽນແປງ ແລະ ຄວາມປະສົງຂອງພຣະອົງທີ່ມີຕໍ່ມະນຸດກໍຈະບໍ່ປ່ຽນແປງ. ບໍ່ວ່າພຣະທຳຂອງພຣະອົງຈະຮຸນແຮງຫຼາຍສໍ່າໃດ, ບໍ່ວ່າສະພາບແວດລ້ອມຈະເປັນໄພຫຼາຍສໍ່າໃດ, ຫຼັກການຂອງພາລະກິດຂອງພຣະອົງຈະບໍ່ປ່ຽນແປງ ແລະ ຄວາມປະສົງໃນການໄຖ່ມະນຸດຂອງພຣະອົງກໍຈະບໍ່ປ່ຽນແປງ. ໂດຍມີເງື່ອນໄຂວ່າ ມັນບໍ່ແມ່ນພາລະກິດແຫ່ງການເປີດເຜີຍເຖິງການສິ້ນສຸດຂອງມະນຸດ ຫຼື ປາຍທາງຂອງມະນຸດ ແລະ ບໍ່ແມ່ນພາລະກິດຂອງໄລຍະສຸດທ້າຍ ຫຼື ພາລະກິດຂອງການນຳແຜນທັງໝົດໃນການຄຸ້ມຄອງຂອງພຣະເຈົ້າມາເຖິງຈຸດສິ້ນສຸດ ແລະ ໂດຍມີເງື່ອນໄຂວ່າ ມັນຢູ່ໃນຊ່ວງເວລາທີ່ພຣະເຈົ້າປະຕິບັດພາລະກິດໃນມະນຸດ ແລ້ວຫົວໃຈຂອງພາລະກິດຂອງພຣະອົງຈະບໍ່ປ່ຽນແປງ. ມັນຈະເປັນຄວາມລອດພົ້ນຂອງມະນຸດຊາດຢູ່ສະເໝີ. ນີ້ຄວນເປັນພື້ນຖານຂອງຄວາມເຊື່ອໃນພຣະເຈົ້າຂອງພວກເຈົ້າ. ຈຸດປະສົງຂອງພາລະກິດສາມຂັ້ນຕອນແມ່ນຄວາມລອດພົ້ນຂອງບັນດາມວນມະນຸດ ເຊິ່ງນີ້ໝາຍເຖິງການໄຖ່ບາບທີ່ສົມບູນຂອງມະນຸດຈາກອຳນາດຂອງຊາຕານ. ເຖິງແມ່ນວ່າ ແຕ່ລະຂັ້ນຕອນຂອງພາລະກິດສາມຂັ້ນຕອນແມ່ນມີຈຸດປະສົງ ແລະ ຄວາມສຳຄັນທີ່ແຕກຕ່າງກັນ ແຕ່ວ່າແຕ່ລະຂັ້ນຕອນກໍເປັນສ່ວນໜຶ່ງຂອງພາລະກິດແຫ່ງການໄຖ່ມະນຸດ ແລະ ແຕ່ລະຂັ້ນຕອນກໍ່ແຕກຕ່າງຈາກພາລະກິດແຫ່ງຄວາມລອດພົ້ນທີ່ຖືກນຳໄປປະຕິບັດໂດຍອີງຕາມຄວາມຕ້ອງການຂອງມະນຸດຊາດ. ເມື່ອເຈົ້າຮູ້ກ່ຽວກັບຈຸດປະສົງຂອງພາລະກິດສາມຂັ້ນຕອນເຫຼົ່ານີ້ ເຈົ້າກໍຈະມີສະຕິເພື່ອເຂົ້າໃຈເຖິງຄວາມສຳຄັນຂອງແຕ່ລະຂັ້ນຕອນຂອງພາລະກິດ ແລະ ຈະຮັບຮູ້ວິທີການປະຕິບັດ ເພື່ອເປັນທີ່ພໍໃຈຂອງຄວາມຕ້ອງການຂອງພຣະເຈົ້າ. ຖ້າເຈົ້າສາມາດມາຮອດຈຸດນີ້ໄດ້, ສິ່ງນີ້ ເຊິ່ງຄືນິມິດທີ່ຍິ່ງໃຫຍ່ທີ່ສຸດກໍຈະກາຍເປັນພື້ນຖານຂອງຄວາມເຊື່ອຂອງເຈົ້າທີ່ມີຕໍ່ພຣະເຈົ້າ. ເຈົ້າບໍ່ຄວນພຽງແຕ່ສະແຫວງຫາວິທີການປະຕິບັດທີ່ງ່າຍ ຫຼື ຄວາມຈິງທີ່ເລິກເຊິ່ງ ແຕ່ຄວນປະສົມນິມິດກັບການປະຕິບັດຕົວຈິງ ເພື່ອຈະມີທັງຄວາມຈິງທີ່ສາມາດນຳເຂົ້າໃນການປະຕິບັດຕົວຈິງ ແລະ ຄວາມຮູ້ທີ່ອີງຕາມນິມິດ. ມີພຽງແຕ່ຕອນນັ້ນ ເຈົ້າຈຶ່ງຈະກາຍມາເປັນຄົນທີ່ສະແຫວງຫາຄວາມຈິງທັງໝົດ.

ພາລະກິດສາມຂັ້ນຕອນແມ່ນຫົວໃຈຂອງການຄຸ້ມຄອງທັງໝົດຂອງພຣະເຈົ້າ ແລະ ພວກມັນສຳແດງໃຫ້ເຫັນເຖິງອຸປະນິໄສຂອງພຣະເຈົ້າ ແລະ ສິ່ງທີ່ພຣະອົງເປັນ. ຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພາລະກິດສາມຂັ້ນຕອນຂອງພຣະເຈົ້າແມ່ນບໍ່ສາມາດຮັບຮູ້ວ່າ ພຣະເຈົ້າສຳແດງອຸປະນິໄສຂອງພຣະອົງແນວໃດ ຫຼື ພວກເຂົາບໍ່ຮູ້ເຖິງສະຕິປັນຍາແຫ່ງພາລະກິດຂອງພຣະເຈົ້າ. ພວກເຂົາກໍ່ຍັງເມີນເສີຍຕໍ່ຫຼາຍໆວິທີທີ່ພຣະອົງຊ່ວຍຊີວິດຂອງມະນຸດຊາດ ແລະ ຄວາມປະສົງຂອງພຣະອົງສຳລັບບັນດາມວນມະນຸດຊາດ. ພາລະກິດສາມຂັ້ນຕອນແມ່ນການສຳແດງທີ່ສົມບູນຂອງພາລະກິດແຫ່ງການໄຖ່ມະນຸດຊາດ.

ຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພາລະກິດສາມຂັ້ນຕອນຈະເມີນເສີຍຕໍ່ວິທີການ ແລະ ຫຼັກການຫຼາຍຢ່າງຂອງພາລະກິດຂອງພຣະວິນຍານບໍລິສຸດ ແລະ ຄົນເຫຼົ່ານັ້ນທີ່ພຽງແຕ່ຍຶດຕິດຢ່າງໜຽວແໜ້ນກັບຫຼັກການທີ່ຫຼົງເຫຼືອຈາກຂັ້ນຕອນໃດໜຶ່ງຂອງພາລະກິດແມ່ນຄົນທີ່ຈຳກັດພຣະເຈົ້າໃຫ້ຢູ່ໃນຫຼັກການ ແລະ ຄວາມເຊື່ອໃນພຣະເຈົ້າຂອງພວກເຂົາກໍເລື່ອນລອຍ ແລະ ບໍ່ແນ່ນອນ. ຄົນດັ່ງກ່າວຈະບໍ່ໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າຈັກເທື່ອ. ມີພຽງແຕ່ພາລະກິດສາມຂັ້ນຕອນຂອງພຣະເຈົ້າທີ່ສາມາດສຳແດງຄວາມສົມບູນຂອງອຸປະນິໄສຂອງພຣະເຈົ້າແທ້ໆ ແລະ ສຳແດງຄວາມປະສົງຂອງພຣະເຈົ້າໃນການໄຖ່ບັນດາມວນມະນຸດຊາດຢ່າງສົມບູນ ແລະ ຂະບວນການທັງໝົດຂອງຄວາມລອດພົ້ນຂອງມະນຸດ. ນີ້ຄືຫຼັກຖານທີ່ພິສູດວ່າ ພຣະອົງໄດ້ເອົາຊະນະຊາຕານ ແລະ ໄດ້ຮັບເອົາມະນຸດຊາດ; ມັນແມ່ນຫຼັກຖານແຫ່ງໄຊຊະນະຂອງພຣະເຈົ້າ ແລະ ແມ່ນການສຳແດງເຖິງອຸປະນິໄສທັງໝົດຂອງພຣະເຈົ້າ. ຄົນເຫຼົ່ານັ້ນທີ່ເຂົ້າໃຈພຽງແຕ່ໜຶ່ງຂັ້ນຕອນຂອງພາລະກິດສາມຂັ້ນຕອນຂອງພຣະເຈົ້າຮູ້ຈັກພຽງແຕ່ສ່ວນໜຶ່ງຂອງອຸປະນິໄສຂອງພຣະເຈົ້າເທົ່ານັ້ນ. ໃນແນວຄວາມຄິດຂອງມະນຸດ, ມັນງ່າຍທີ່ຈະໃຫ້ຂັ້ນຕອນອັນດຽວຂອງພາລະກິດນີ້ກາຍມາເປັນຫຼັກການ ແລະ ມັນມີຄວາມເປັນໄປໄດ້ວ່າ ມະນຸດຈະສ້າງຕັ້ງກົດລະບຽບທີ່ຕາຍຕົວກ່ຽວກັບພຣະເຈົ້າ ແລະ ນຳໃຊ້ອຸປະນິໄສພຽງສ່ວນໜຶ່ງຂອງພຣະເຈົ້າເພື່ອໃຫ້ເປັນຕົວແທນອຸປະນິໄສທັງໝົດຂອງພຣະເຈົ້າ. ຍິ່ງໄປກວ່ານັ້ນ, ຈິນຕະນາການສ່ວນຫຼາຍຂອງມະນຸດກໍປະສົມຢູ່ໃນນັ້ນ ໂດຍທີ່ມະນຸດຈຳກັດອຸປະນິໄສ, ຄວາມເປັນຢູ່ ແລະ ສະຕິປັນຍາຂອງພຣະເຈົ້າ ພ້ອມທັງຫຼັກການພາລະກິດຂອງພຣະເຈົ້າໃຫ້ຢູ່ພາຍໃນຂອບເຂດທີ່ຈຳກັດ ໂດຍເຊື່ອວ່າ ຖ້າພຣະເຈົ້າເຄີຍເປັນແບບນີ້ແລ້ວພຣະອົງກໍຈະຄົງເປັນຢູ່ຄືເກົ່າຕະຫຼອດເວລາ ແລະ ຈະບໍ່ປ່ຽນແປງຈັກເທື່ອ. ມີພຽງແຕ່ຄົນເຫຼົ່ານັ້ນທີ່ຮູ້ຈັກ ແລະ ຮູ້ຄຸນຄ່າຂອງພາລະກິດສາມຂັ້ນຕອນຈຶ່ງສາມາດເຂົ້າໃຈພຣະເຈົ້າຢ່າງສົມບູນ ແລະ ຖືກຕ້ອງ. ຢ່າງໜ້ອຍທີ່ສຸດ, ພວກເຂົາຈະບໍ່ນິຍາມພຣະເຈົ້າໃຫ້ເປັນພຣະເຈົ້າຂອງຊາວອິດສະຣາເອນ ຫຼື ຊາວຢິວ ແລະ ບໍ່ເຫັນພຣະອົງເປັນພຣະເຈົ້າທີ່ຖືກຄຶງດ້ວຍຕະປູທີ່ໄມ້ກາງແຂນໂດຍເຫັນແກ່ຜົນປະໂຫຍດຂອງມະນຸດຢູ່ສະເໝີ. ຖ້າຄົນໆໜຶ່ງພຽງແຕ່ມາຮູ້ຈັກພຣະເຈົ້າຈາກໜຶ່ງຂັ້ນຕອນຂອງພາລະກິດຂອງພຣະອົງ, ສະນັ້ນ ຄວາມຮູ້ຂອງພວກເຂົາກໍ່ມີໜ້ອຍຫຼາຍເກີນໄປ ແລະ ປະລິມານກໍ່ບໍ່ສາມາດທຽບໄດ້ກັບນ້ຳຢອດໜຶ່ງໃນມະຫາສະໝຸດ. ຖ້າບໍ່ແມ່ນ ແລ້ວເປັນຫຍັງທະຫານຍາມເກົ່າແກ່ທີ່ເຄັ່ງສາສະໜາຫຼາຍຄົນຈຶ່ງຄຶງພຣະເຈົ້າດ້ວຍຕະປູເທິງໄມ້ກາງແຂນໂດຍທີ່ຍັງມີຊີວິດຢູ່? ມັນບໍ່ແມ່ນຍ້ອນມະນຸດກັກຂັງພຣະເຈົ້າພາຍໃນຂອບເຂດທີ່ແນ່ນອນບໍ? ຫຼາຍຄົນບໍ່ຕໍ່ຕ້ານພຣະເຈົ້າ ແລະ ຄັດຂວາງພາລະກິດຂອງພຣະວິນຍານບໍລິສຸດ ຍ້ອນພວກເຂົາບໍ່ຮູ້ຈັກພາລະກິດທີ່ຫຼາກຫຼາຍ ແລະ ແຕກຕ່າງຂອງພຣະເຈົ້າບໍ ແລະ ຍິ່ງໄປກວ່ານັ້ນກໍຍ້ອນພວກເຂົາມີຄວາມຮູ້ ແລະ ຫຼັກການໜ້ອຍດຽວ ເຊິ່ງໃຊ້ເພື່ອປະເມີນພາລະກິດຂອງພຣະວິນຍານບໍລິສຸດແມ່ນບໍ? ເຖິງແມ່ນວ່າ ປະສົບການຂອງຄົນດັ່ງກ່າວມີຢູ່ເລັກນ້ອຍ, ພວກເຂົາກໍອວດດີ ແລະ ປ່ອຍຕົວໃນທຳມະຊາດ ແລະ ພວກເຂົາເບິ່ງພາລະກິດຂອງພຣະວິນຍານບໍລິສຸດດ້ວຍການດູຖູກ, ເມີນເສີຍຕໍ່ລະບຽບວິໄນຂອງພຣະວິນຍານບໍລິສຸດ ແລະ ຍິ່ງໄປກວ່ານັ້ນ ພວກເຂົາໄດ້ນຳໃຊ້ການໂຕ້ຖຽງແບບເກົ່າໆໃນເລື່ອງທີ່ບໍ່ສຳຄັນເພື່ອ "ຢືນຢັນ" ພາລະກິດຂອງ

ພຣະວິນຍານບໍລິສຸດ. ພວກເຂົາຍັງສະແດງລະຄອນ ແລະ ໝັ້ນໃຈໃນການຮຽນຮູ້ ແລະ ຄວາມຮູ້ຢ່າງກວ້າງຂວາງຂອງຕົນເອງທັງໝົດ ແລະ ເຊື່ອໝັ້ນວ່າພວກເຂົາສາມາດທ່ອງທ່ຽວທົ່ວແຜ່ນດິນໂລກ. ຄົນດັ່ງກ່າວບໍ່ແມ່ນຄົນເຫຼົ່ານັ້ນທີ່ຖືກກຽດຊັງ ແລະ ປະຕິເສດໂດຍພຣະວິນຍານບໍລິສຸດບໍ ແລະ ພວກເຂົາຈະບໍ່ຖືກຍຸກໃໝ່ໂຍນອອກບໍ? ຄົນເຫຼົ່ານັ້ນທີ່ມາຢູ່ຕໍ່ໜ້າພຣະເຈົ້າ ແລະ ຕໍ່ຕ້ານພຣະອົງຢ່າງເປີດເຜີຍເປັນຜູ້ຮ້າຍທີ່ໂງ່ຈ້າ ແລະ ຂາດຄວາມຮູ້ບໍ ເຊິ່ງເປັນຄົນທີ່ພຽງແຕ່ພະຍາຍາມສະແດງວ່າ ພວກເຂົາສະຫຼາດຫຼັກແຫຼມພຽງໃດ? ພວກເຂົາເຮັດຄືຄົນໂງ່ໃນໂລກແຫ່ງ "ການສຶກສາ" ດ້ວຍພຽງແຕ່ຫຼັກການທີ່ບໍ່ສຳຄັນໃນການສັ່ງສອນຄົນ ດ້ວຍຄວາມຮູ້ໃນພຣະຄຳພີພຽງເລັກນ້ອຍ, ພວກເຂົາພະຍາຍາມກັບຫົວກັບຫາງພາລະກິດຂອງພຣະວິນຍານບໍລິສຸດ ແລະ ພະຍາຍາມເຮັດໃຫ້ມັນໝູນຮອບຂະບວນການຄວາມຄິດຂອງພວກເຂົາເອງ. ຍ້ອນຄວາມບໍ່ຄິດທາງໄກທີ່ເປັນຢູ່ ພວກເຂົາກໍໄດ້ພະຍາຍາມເບິ່ງພາລະກິດ 6.000 ປີຂອງພຣະເຈົ້າດ້ວຍສາຍຕາພຽງແວບດຽວ. ຄົນເຫຼົ່ານີ້ບໍ່ມີເຫດຜົນທີ່ສົມຄວນເວົ້າເຖິງ! ຕາມຄວາມເປັນຈິງແລ້ວ, ເມື່ອຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າຍິ່ງໃຫຍ່ສໍ່າໃດ ພວກເຂົາກໍຕັດສິນພາລະກິດຂອງພຣະອົງຢ່າງຊັກຊ້າຫຼາຍສໍ່ານັ້ນ. ຍິ່ງໄປກວ່ານັ້ນ, ພວກເຂົາພຽງແຕ່ກ່າວເຖິງຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າໃນປັດຈຸບັນພຽງເລັກນ້ອຍ ແຕ່ພວກເຂົາບໍ່ດ່ວນໃນການຕັດສິນ. ເມື່ອມະນຸດຮູ້ຈັກພຣະເຈົ້າໜ້ອຍສໍ່າໃດ ພວກເຂົາກໍຈະເປັນຄົນອວດດີ ແລະ ໝັ້ນໃຈໃນຕົວຫຼາຍເກີນໄປຫຼາຍສໍ່ານັ້ນ ແລະ ພວກເຂົາກໍຈະປະກາດຄວາມເປັນຢູ່ຂອງພຣະເຈົ້າແບບບໍ່ມີເຫດຜົນຫຼາຍສໍ່ານັ້ນ ແຕ່ພວກເຂົາພຽງແຕ່ກ່າວເຖິງທິດສະດີ ແລະ ບໍ່ມີຫຼັກຖານທີ່ແທ້ຈິງ. ຄົນດັ່ງກ່າວບໍ່ມີຄຸນຄ່າເລີຍ. ຄົນເຫຼົ່ານັ້ນທີ່ເຫັນພາລະກິດຂອງພຣະວິນຍານບໍລິສຸດເປັນເກມແມ່ນຄົນທີ່ບໍ່ມີຄວາມໝາຍ! ຄົນເຫຼົ່ານັ້ນທີ່ບໍ່ລະມັດລະວັງ ເມື່ອພວກເຂົາປະເຊີນກັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ ເຊິ່ງເປັນຄົນທີ່ໃຊ້ປາກເວົ້າຫຼາຍ ແມ່ນຄົນທີ່ຕັດສິນຢ່າງໄວວາ ເຊິ່ງເປັນຄົນທີ່ຢາກປະຕິເສດຄວາມຖືກຕ້ອງຂອງພາລະກິດຂອງພຣະວິນຍານບໍລິສຸດຢ່າງມີອິດສະຫຼະຕາມອາລົມຂອງພວກເຂົາ ແລະ ເປັນຄົນທີ່ຍັງດູຖູກ ແລະ ໝິ່ນປະໝາດ, ຄົນທີ່ຂາດຄວາມເຄົາລົບນັບຖືດັ່ງກ່າວບໍ່ເມີນເສີຍຕໍ່ພາລະກິດຂອງພຣະວິນຍານບໍລິສຸດບໍ? ຍິ່ງໄປກວ່ານັ້ນ, ພວກເຂົາບໍ່ແມ່ນຄົນທີ່ອວດດີຫຼາຍ, ຄົນທີ່ຍິ່ງຍະໂສໂດຍທຳມະຊາດ ແລະ ບໍ່ສາມາດປົກຄອງໄດ້ບໍ? ເຖິງແມ່ນວ່າ ມື້ທີ່ຄົນເຫຼົ່ານັ້ນຈະຍອມຮັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດຈະມາເຖິງ, ພຣະເຈົ້າກໍຍັງຈະບໍ່ອົດທົນຕໍ່ພວກເຂົາ. ພວກເຂົາບໍ່ພຽງແຕ່ດູຖູກຄົນທີ່ປະຕິບັດພາລະກິດສຳລັບພຣະເຈົ້າ ແຕ່ພວກເຂົາຍັງໝິ່ນປະໝາດພຣະເຈົ້າພຣະອົງເອງ. ຄົນທີ່ສິ້ນຫວັງເຊັ່ນນັ້ນຈະບໍ່ໄດ້ຮັບການອະໄພ ບໍ່ວ່າຈະໃນຍຸກນີ້ ຫຼື ຍຸກທີ່ຈະມາຮອດ ແລະພວກເຂົາຈະພິນາດໃນນະຮົກ! ຄົນທີ່ບໍ່ມີຄວາມເຄົາລົບ ແລະ ປ່ອຍຕົວເອງໄປຕາມທຳມະຊາດເຫຼົ່ານັ້ນກຳລັງທຳທ່າວ່າ ເຊື່ອໃນພຣະເຈົ້າ ແລະ ເມື່ອຜູ້ຄົນເປັນແບບນັ້ນຫຼາຍສໍ່າໃດ, ພວກເຂົາກໍ່ມີແນວໂນ້ມທີ່ຈະລະເມີດພຣະບັນຍັດຂອງພຣະເຈົ້າຫຼາຍສໍ່ານັ້ນ. ຄົນທີ່ອວດດີເຫຼົ່ານັ້ນທັງໝົດທີ່ບໍ່ຢັບຢັ້ງຕົວເອງຕັ້ງແຕ່ເກີດ ແລະ ຄົນບໍ່ເຄີຍເຊື່ອຟັງໃຜເລີຍ ລ້ວນແລ້ວແຕ່ແມ່ນທຸກຄົນທີ່ຍ່າງເທິງເສັ້ນທາງນີ້ບໍ? ພວກເຂົາບໍ່ຕໍ່ຕ້ານພຣະເຈົ້າໃນທຸກໆມື້ບໍ, ພຣະເຈົ້າທີ່ທີ່ໃໝ່ຢູ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ? ໃນປັດຈຸບັນ,

ພວກເຈົ້າຄວນເຂົ້າໃຈວ່າ ເປັນຫຍັງພວກເຈົ້າຕ້ອງຮູ້ຄວາມສຳຄັນຂອງພາລະກິດສາມຂັ້ນຕອນຂອງພຣະເຈົ້າ. ພຣະທຳທີ່ເຮົາໄດ້ກ່າວກໍເພື່ອຜົນປະໂຫຍດຂອງພວກເຈົ້າ ແລະ ບໍ່ແມ່ນການເວົ້າທີ່ເປົ່າວ່າງ. ຖ້າພວກເຈົ້າພຽງແຕ່ອ່ານມັນຄືກັບການຊົມດອກໄມ້ໃນຂະນະທີ່ກຳລັງຂີ່ຜ່ານເທິງຫຼັງມ້າ, ພາລະກິດທີ່ເຮົາໄດ້ປະຕິບັດຢ່າງໜັກໜ່ວງຈະບໍ່ມີປະໂຫຍດເລີຍແມ່ນບໍ? ພວກເຈົ້າແຕ່ລະຄົນຄວນຮູ້ຈັກທຳມະຊາດຂອງພວກເຈົ້າເອງ. ພວກເຈົ້າສ່ວນຫຼາຍມີທັກສະໃນການໂຕ້ຖຽງ; ຄຳຕອບຕໍ່ຄຳຖາມທີ່ເປັນທິດສະດີໂດຍການເວົ້າຢ່າງງ່າຍດາຍ ແຕ່ພວກເຈົ້າບໍ່ມີຫຍັງທີ່ຈະກ່າວເຖິງຕໍ່ຄຳຖາມທີ່ກ່ຽວຂ້ອງກັບແກ່ນແທ້. ເຖິງແມ່ນໃນປັດຈຸບັນ ພວກເຈົ້າຍັງປ່ອຍໃຫ້ຕົວເອງຢູ່ໃນການສົນທະນາທີ່ບໍ່ມີຄວາມໝາຍ, ບໍ່ສາມາດປ່ຽນແປງອຸປະນິໄສທີ່ເກົ່າແກ່ ແລະ ພວກເຈົ້າສ່ວນຫຼາຍບໍ່ມີເຈດຕະນາໃນການປ່ຽນແປງວິທີການສະແຫວງຫາ ເພື່ອໄດ້ຮັບຄວາມຈິງທີ່ສູງສົ່ງຂຶ້ນ, ພຽງແຕ່ດຳເນີນຊີວິດຢ່າງບໍ່ເຕັມໃຈແທນ. ຄົນເຊັ່ນນີ້ຈະສາມາດຕິດຕາມພຣະເຈົ້າຈົນຮອດມື້ສຸດທ້າຍໄດ້ແນວໃດ? ເຖິງແມ່ນວ່າ ພວກເຈົ້າຈະຢູ່ຮອດຈຸດສິ້ນສຸດຂອງເສັ້ນທາງ, ມັນຈະມີປະໂຫຍດຫຍັງໃຫ້ກັບພວກເຈົ້າ? ມັນດີກວ່າທີ່ຈະປ່ຽນແປງຄວາມຄິດຂອງພວກເຈົ້າກ່ອນທີ່ມັນຈະຊ້າເກີນໄປ ໂດຍການສະແຫວງຫາຢ່າງແທ້ຈິງ ຫຼື ບໍ່ສະນັ້ນ ກໍຖອນຕົວກ່ອນກຳນົດ. ເມື່ອເວລາຜ່ານໄປ ພວກເຈົ້າກໍຈະກາຍເປັນເຊື້ອກາຝາກທີ່ເອົາປຽບຄົນອື່ນ, ພວກເຈົ້າເຕັມໃຈທີ່ຈະຮັບບົດບາດທີ່ຕໍ່າ ແລະ ເປັນຕາໜ້າອາຍນັ້ນບໍ?

ພາລະກິດສາມຂັ້ນຕອນເປັນການບັນທຶກຂອງພາລະກິດທັງໝົດຂອງພຣະເຈົ້າ; ພວກມັນແມ່ນການບັນທຶກຂອງການໄຖ່ບາບໃຫ້ແກ່ມະນຸດຊາດຂອງພຣະເຈົ້າ ແລະ ພວກມັນບໍ່ແມ່ນເລື່ອງທີ່ຈະຈິນຕະນາການໄດ້. ຖ້າພວກເຈົ້າຕ້ອງການສະແຫວງຫາຄວາມຮູ້ຂອງອຸປະນິໄສທັງໝົດຂອງພຣະເຈົ້າຢ່າງແທ້ຈິງ, ພວກເຈົ້າກໍຕ້ອງຮູ້ຈັກພາລະກິດສາມຂັ້ນຕອນທີ່ພຣະເຈົ້າປະຕິບັດ ແລະ ຍິ່ງໄປກວ່ານັ້ນພວກເຈົ້າຕ້ອງບໍ່ລືມຂັ້ນຕອນໃດໜຶ່ງ. ນີ້ແມ່ນສິ່ງເລັກນ້ອຍທີ່ສຸດ ທີ່ຄົນເຫຼົ່ານັ້ນທີ່ສະແຫວງຫາເພື່ອຮູ້ຈັກພຣະເຈົ້າຈະຕ້ອງໄດ້ຮັບ. ມະນຸດເອງບໍ່ສາມາດປັ້ນແຕ່ງຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າ. ນີ້ບໍ່ແມ່ນບາງຢ່າງທີ່ມະນຸດສາມາດຈິນຕະນາການໄດ້ ຫຼື ມັນບໍ່ແມ່ນຜົນຕາມມາຂອງຄວາມກະລຸນາຂອງພຣະວິນຍານບໍລິສຸດທີ່ມີໃຫ້ກັບຄົນໃດໜຶ່ງ. ກົງກັນຂ້າມ, ມັນແມ່ນຄວາມຮູ້ທີ່ເກີດຫຼັງຈາກທີ່ມະນຸດໄດ້ປະສົບກັບພາລະກິດຂອງພຣະເຈົ້າ ແລະ ມັນແມ່ນຄວາມຮູ້ຂອງພຣະເຈົ້າທີ່ພຽງແຕ່ເກີດຂຶ້ນຫຼັງຈາກທີ່ໄດ້ປະສົບກັບຄວາມຈິງຂອງພາລະກິດຂອງພຣະເຈົ້າ. ຄວາມຮູ້ດັ່ງກ່າວບໍ່ພ້ອມທີ່ຈະສາມາດຮັບໄດ້ ຫຼື ມັນບໍ່ແມ່ນສິ່ງທີ່ສາມາດສອນໄດ້. ມັນກ່ຽວຂ້ອງກັບປະສົບການສ່ວນຕົວທັງໝົດ. ການໄຖ່ບາບໃຫ້ມະນຸດຊາດຂອງພຣະເຈົ້າແມ່ນໃຈຄວາມສຳຄັນຂອງພາລະກິດສາມຂັ້ນຕອນເຫຼົ່ານີ້ ແຕ່ປະກອບມີວິທີການປະຕິບັດພາລະກິດ ແລະ ຫຼາຍວິທີທາງທີ່ສຳແດງເຖິງອຸປະນິໄສຂອງພຣະເຈົ້າພາຍໃນພາລະກິດແຫ່ງຄວາມລອດພົ້ນ. ນີ້ແມ່ນສິ່ງທີ່ຍາກທີ່ສຸດທີ່ມະນຸດຕ້ອງຈຳແນກ ແລະ ມັນເປັນສິ່ງນີ້ທີ່ຍາກທີ່ມະນຸດຕ້ອງເຂົ້າໃຈ. ການແບ່ງແຍກລະຫວ່າງຍຸກ, ການປ່ຽນແປງໃນພາລະກິດຂອງພຣະເຈົ້າ, ການປ່ຽນແປງໃນສະຖານທີ່ຂອງພາລະກິດ, ການປ່ຽນແປງຂອງຄົນທີ່ຮັບພາລະກິດນີ້ ແລະ ສິ່ງອື່ນໆ, ສິ່ງເຫຼົ່ານີ້ຖືກລວມໄວ້ໃນພາລະກິດສາມຂັ້ນຕອນ. ໂດຍສະເພາະແລ້ວ, ຄວາມແຕກຕ່າງຂອງວິທີການ

ປະຕິບັດພາລະກິດຂອງພຣະວິນຍານບໍລິສຸດ ລວມທັງການດັດແປງຂອງອຸປະນິໄສ, ພາບລັກ, ຊື່, ຕົວຕົນຂອງພຣະເຈົ້າ ຫຼື ການປ່ຽນແປງອື່ນໆ ທັງໝົດແມ່ນສ່ວນຕ່າງໆໃນພາລະກິດສາມຂັ້ນຕອນ. ຂັ້ນຕອນໜຶ່ງຂອງພາລະກິດສາມາດພຽງແຕ່ເປັນຕົວແທນໃຫ້ກັບໜຶ່ງສ່ວນ ແລະ ມີຄວາມຈຳກັດພາຍໃນເຂດທີ່ແນ່ນອນ. ມັນບໍ່ໄດ້ກ່ຽວຂ້ອງກັບການແບ່ງແຍກຂອງຍຸກ ຫຼື ການປ່ຽນແປງໃນພາລະກິດຂອງພຣະເຈົ້າ, ຢ່າວ່າແຕ່ລັກສະນະອື່ນໆເລີຍ. ນີ້ແມ່ນຄວາມຈິງທີ່ເຫັນໄດ້ຢ່າງຊັດເຈນ. ສາມຂັ້ນຕອນແມ່ນຄວາມສົມບູນຂອງພາລະກິດຂອງພຣະເຈົ້າໃນການໄຖ່ມະນຸດຊາດ. ມະນຸດຕ້ອງຮູ້ຈັກພາລະກິດຂອງພຣະເຈົ້າ ແລະ ອຸປະນິໄສຂອງພຣະເຈົ້າໃນພາລະກິດແຫ່ງຄວາມລອດພົ້ນ; ຖ້າປາສະຈາກຄວາມຈິງນີ້ ຄວາມຮູ້ທີ່ເຈົ້າມີກ່ຽວກັບພຣະເຈົ້າກໍ່ເປັນພຽງຄຳເວົ້າທີ່ເປົ່າວ່າງ, ບໍ່ມີຫຍັງນອກຈາກດີແຕ່ປາກ. ຄວາມຮູ້ດັ່ງກ່າວບໍ່ສາມາດຊັກຊວນ ຫຼື ເອົາຊະນະມະນຸດໄດ້; ຄວາມຮູ້ດັ່ງກ່າວບໍ່ໄດ້ສອດຄ່ອງກັບຄວາມເປັນຈິງ ແລະ ມັນບໍ່ແມ່ນຄວາມຈິງເລີຍ. ມັນອາດຈະອຸດົມສົມບູນ ແລະ ຟັງສະບາຍຫູ ແຕ່ຖ້າມັນຂັດກັບອຸປະນິໄສໂດຍທຳມະຊາດຂອງພຣະເຈົ້າ, ພຣະເຈົ້າກໍຈະບໍ່ລະເວັ້ນເຈົ້າ. ບໍ່ແມ່ນພຽງແຕ່ພຣະອົງຈະບໍ່ຍົກຍ້ອງຄວາມຮູ້ຂອງເຈົ້າ ແຕ່ພຣະອົງຍັງຈະນຳການແກ້ແຄ້ນມາເຖິງເຈົ້າຍ້ອນເຈົ້າເປັນຄົນບາບທີ່ໄດ້ໝິ່ນປະໝາດພຣະອົງ. ພຣະທຳຂອງການຮູ້ຈັກພຣະເຈົ້າບໍ່ແມ່ນເວົ້າໄດ້ຢ່າງງ່າຍໆ. ເຖິງແມ່ນວ່າ ເຈົ້າຈະເວົ້າຢ່າງຄ່ອງແຄ້ວແຕ່ບໍ່ຈິງໃຈ ແລະ ເວົ້າຊັກຈູງເກັ່ງ ແລະ ເຖິງແມ່ນວ່າຄຳເວົ້າຂອງເຈົ້າສະຫຼາດຫຼາຍຈົນເຈົ້າສາມາດຖຽງໃຫ້ສີດຳກາຍເປັນສີຂາວ ແລະ ໃຫ້ສີຂາວກາຍມາເປັນສີດຳ, ແຕ່ເຈົ້າຍັງບໍ່ມີຄວາມຮູ້ ເມື່ອເວົ້າກ່ຽວກັບຄວາມຮູ້ຂອງພຣະເຈົ້າ. ພຣະເຈົ້າບໍ່ແມ່ນຄົນທີ່ເຈົ້າສາມາດຕັດສິນຢ່າງບໍ່ຮອບຄອບ ຫຼື ສັນລະເສີນແບບເສີຍໆ ຫຼື ດູຖູກຢ່າງເສີຍເມີຍ. ເຈົ້າສັນລະເສີນຄົນໃດໜຶ່ງ ແລະ ທຸກຄົນ ແຕ່ເຈົ້າດີ້ນລົນເພື່ອຊອກຫາຄຳເວົ້າທີ່ຖືກຕ້ອງເພື່ອບັນລະຍາຍເຖິງຄວາມກະລຸນາສູງສຸດຂອງພຣະເຈົ້າ, ນີ້ແມ່ນສິ່ງທີ່ຜູ້ຈຳນົນທຸກຄົນໄດ້ມາເຂົ້າໃຈ. ເຖິງແມ່ນວ່າມີຜູ້ຊຳນານທາງດ້ານພາສາຫຼາຍຄົນທີ່ສາມາດບັນລະຍາຍເຖິງພຣະເຈົ້າ, ຄວາມຖືກຕ້ອງຂອງສິ່ງທີ່ພວກເຂົາບັນລະຍາຍແມ່ນພຽງແຕ່ໜຶ່ງສ່ວນຮ້ອຍຂອງຄວາມຈິງທີ່ເວົ້າໂດຍຄົນທີ່ເປັນຂອງພຣະເຈົ້າ, ຄົນທີ່ມີພຽງແຕ່ຄຳສັບທີ່ຈຳກັດ, ແມ່ນມີປະສົບການທີ່ອຸດົມສົມບູນໃຫ້. ດ້ວຍເຫດນັ້ນ, ສາມາດເຫັນໄດ້ວ່າຄວາມຮູ້ຂອງພຣະເຈົ້າຕັ້ງຢູ່ໃນຄວາມຖືກຕ້ອງ ແລະ ຄວາມເປັນຈິງ, ບໍ່ໄດ້ຢູ່ໃນການນຳໃຊ້ຄຳເວົ້າທີ່ສະຫຼາດ ຫຼື ຄຳສັບທີ່ອຸດົມສົມບູນ ແລະ ຄວາມຮູ້ຂອງມະນຸດ ແລະ ຄວາມຮູ້ຂອງພຣະເຈົ້າບໍ່ກ່ຽວຂ້ອງກັນເລີຍ. ບົດຮຽນຂອງການຮູ້ຈັກພຣະເຈົ້າສູງສົ່ງກວ່າວິທະຍາສາດທຳມະຊາດໃດໜຶ່ງຂອງມະນຸດຊາດ. ມັນແມ່ນບົດຮຽນທີ່ມີແຕ່ຄົນຈຳນວນໜ້ອຍດຽວຈະສາມາດໄດ້ຮັບ ເຊິ່ງເປັນຄົນທີ່ສະແຫວງຫາເພື່ອຮູ້ຈັກກັບພຣະເຈົ້າ ແລະ ຄົນທີ່ມີຄວາມສາມາດໃດໜຶ່ງຈະບໍ່ສາມາດໄດ້ຮັບ. ດ້ວຍເຫດນັ້ນ, ພວກເຈົ້າຕ້ອງບໍ່ເບິ່ງການຮູ້ຈັກກັບພຣະເຈົ້າ ແລະ ການສະແຫວງຫາຄວາມຈິງເປັນຄືກັບວ່າພວກມັນເປັນສິ່ງທີ່ເດັກນ້ອຍທຳມະດາກໍ່ສາມາດບັນລຸໄດ້. ບາງເທື່ອ ເຈົ້າອາດປະສົບຜົນສຳເລັດຢ່າງສົມບູນໃນຊີວິດຄອບຄົວຂອງເຈົ້າ ຫຼື ອາຊີບຂອງເຈົ້າ ຫຼື ໃນການແຕ່ງງານຂອງເຈົ້າ ແຕ່ເມື່ອມັນກ່ຽວກັບຄວາມຈິງ ແລະ ບົດຮຽນຂອງການຮູ້ ຈັກກັບພຣະເຈົ້າ, ເຈົ້າບໍ່ມີຫຍັງທີ່ຈະສະແດງຕົວເອງເລີຍ ແລະ ເຈົ້າບໍ່ໄດ້

ສຳເລັດຫຍັງເລີຍ. ສາມາດເວົ້າໄດ້ວ່າ ການນຳຄວາມຈິງເຂົ້າສູ່ການປະຕິບັດຕົວຈິງ ແມ່ນສິ່ງທີ່ຫຍຸ້ງຍາກຫຼາຍທີ່ສຸດສຳລັບພວກເຈົ້າ ແລະ ການຮູ້ຈັກພຣະເຈົ້າກໍເປັນບັນຫາທີ່ຍິ່ງໃຫຍ່ກວ່າ. ນີ້ຄືຄວາມຫຍຸ້ງຍາກຂອງພວກເຈົ້າ ແລະ ນີ້ຍັງແມ່ນຄວາມຫຍຸ້ງຍາກທີ່ບັນດາມວນມະນຸດຊາດໄດ້ປະເຊີນ. ທ່າມກາງຄົນເຫຼົ່ານັ້ນທີ່ບັນລຸຄວາມສຳເລັດດ້ວຍເຫດຜົນການຮູ້ຈັກພຣະເຈົ້າ, ບໍ່ມີໃຜເລີຍທີ່ຢູ່ໃນລະດັບມາດຕະຖານ. ມະນຸດບໍ່ຮູ້ຈັກວ່າ ການຮູ້ຈັກພຣະເຈົ້າໝາຍເຖິງຫຍັງ ຫຼື ເປັນຫຍັງຈຶ່ງຕ້ອງຮູ້ຈັກພຣະເຈົ້າ ຫຼື ຄົນໆໜຶ່ງຕ້ອງໄປເຖິງລະດັບໃດເພື່ອຮູ້ຈັກພຣະເຈົ້າ. ນີ້ເປັນສິ່ງທີ່ສັບສົນໃຫ້ກັບມະນຸດຊາດ ແລະ ມັນເປັນປິດສະໜາທີ່ຍິ່ງໃຫຍ່ທີ່ສຸດທີ່ມະນຸດຊາດປະເຊີນຢູ່ພໍສົມຄວນ ແລະ ບໍ່ມີໃຜສາມາດຕອບຄຳຖາມນີ້ໄດ້ ຫຼື ບໍ່ມີໃຜເຕັມໃຈຕອບຄຳຖາມນີ້ ຍ້ອນວ່າ ໃນປັດຈຸບັນ ບໍ່ມີໃຜທ່າມກາງມະນຸດທີ່ປະສົບຜົນສຳເລັດໃນການສຶກສາພາລະກິດນີ້ໄດ້. ບາງເທື່ອ ເມື່ອປິດສະໜາຂອງພາລະກິດສາມຂັ້ນຕອນຖືກເຮັດໃຫ້ມະນຸດຮັບຮູ້ ມັນກໍ່ຈະປະກົດມີກຸ່ມຄົນທີ່ມີພອນສະຫວັນທີ່ຮູ້ຈັກພຣະເຈົ້າຕາມມາ. ແນ່ນອນ ເຮົາຫວັງວ່າ ມັນຈະເປັນແບບນັ້ນ ແລະ ຍິ່ງໄປກວ່ານັ້ນ ເຮົາຢູ່ໃນຂະບວນການປະຕິບັດພາລະກິດນີ້ ແລະ ຫວັງທີ່ຈະໄດ້ເຫັນການປາກົດຕົວຂອງຄົນທີ່ມີພອນສະຫວັນດັ່ງກ່າວໃນອະນາຄົດທີ່ໃກ້ໆນີ້. ພວກເຂົາຈະກາຍມາເປັນຄົນເຫຼົ່ານັ້ນທີ່ເປັນພະຍານໃຫ້ກັບຄວາມຈິງກ່ຽວກັບພາລະກິດສາມຂັ້ນຕອນເຫຼົ່ານີ້ ແລະ ແນ່ນອນ ພວກເຂົາຈະເປັນຄົນທຳອິດທີ່ເປັນພະຍານໃຫ້ກັບພາລະກິດສາມຂັ້ນຕອນເຫຼົ່ານີ້. ແຕ່ບໍ່ມີຫຍັງທີ່ຈະເປັນທຸກໃຈ ແລະ ເປັນຕາເສຍດາຍຫຼາຍກວ່າຄົນທີ່ມີພອນສະຫວັນດັ່ງກ່າວບໍ່ໄດ້ປາກົດຂຶ້ນໃນມື້ທີ່ພາລະກິດຂອງພຣະເຈົ້າໃກ້ຈະສິ້ນສຸດລົງ ຫຼື ຖ້າມີພຽງແຕ່ໜຶ່ງ ຫຼື ສອງຄົນ, ຄົນດັ່ງກ່າວໄດ້ຍອມຮັບດ້ວຍຕົວເອງ ເພື່ອໃຫ້ພຣະເຈົ້າຜູ້ທີ່ມາບັງເກີດເປັນມະນຸດເຮັດໃຫ້ສົມບູນ. ເຖິງຢ່າງໃດກໍ່ຕາມ ນີ້ເປັນພຽງກໍລະນີທີ່ຮ້າຍແຮງທີ່ສຸດ. ບໍ່ວ່າຈະເປັນກໍລະນີໃດກໍ່ຕາມ, ເຮົາຍັງຫວັງວ່າຄົນເຫຼົ່ານັ້ນທີ່ສະແຫວງຫາຢ່າງແທ້ຈິງຈະໄດ້ຮັບພຣະພອນນີ້. ຕັ້ງແຕ່ການເລີ່ມຕົ້ນຂອງເວລາ, ຍັງບໍ່ມີພາລະກິດທີ່ເປັນແບບນີ້ມາກ່ອນ, ພາລະໜ້າທີ່ດັ່ງກ່າວບໍ່ເຄີຍປະກົດມີໃນປະຫວັດສາດຂອງການພັດທະນາມະນຸດຈັກເທື່ອ. ຖ້າເຈົ້າສາມາດກາຍມາເປັນໜຶ່ງໃນກຸ່ມຄົນທຳອິດທີ່ຮູ້ຈັກພຣະເຈົ້າ, ສິ່ງນີ້ຈະບໍ່ເປັນກຽດຕິຍົດອັນສູງສຸດຂອງສິ່ງທີ່ມີຊີວິດທັງໝົດບໍ? ພຣະເຈົ້າຈະຍົກຍ້ອງສິ່ງທີ່ມີຊີວິດອື່ນໆທີ່ຢູ່ທ່າມກາງມະນຸດຊາດຫຼາຍກວ່າບໍ? ພາລະກິດດັ່ງກ່າວບໍ່ງ່າຍທີ່ຈະເຮັດໃຫ້ສຳເລັດ ແຕ່ໃນທີ່ສຸດກໍຍັງຈະໄດ້ຮັບຜົນຕອບແທນ. ບໍ່ວ່າຈະເປັນເພດໃດ ຫຼື ສັນຊາດໃດກໍຕາມ, ທຸກຄົນເຫຼົ່ານັ້ນທີ່ສາມາດໄດ້ຮັບຄວາມຮູ້ຂອງພຣະເຈົ້າຈະໄດ້ຮັບກຽດຕິຍົດທີ່ຍິ່ງໃຫຍ່ທີ່ສຸດຂອງພຣະເຈົ້າໃນທີ່ສຸດ ແລະ ຈະເປັນພຽງຄົນດຽວທີ່ມີສິດອຳນາດຂອງພຣະອົງ. ນີ້ຄືພາລະກິດໃນປັດຈຸບັນ ແລະ ມັນເປັນພາລະກິດສຳລັບອະນາຄົດເຊັ່ນກັນ; ມັນເປັນພາລະກິດສຸດທ້າຍ ແລະ ສູງສົ່ງທີ່ສຸດທີ່ຈະຖືກເຮັດໃຫ້ສຳເລັດໃນຊ່ວງເວລາ 6.000 ປີແຫ່ງພາລະກິດ ແລະ ມັນເປັນວິທີການປະຕິບັດພາລະກິດທີ່ເປີດເຜີຍມະນຸດແຕ່ລະປະເພດ. ຜ່ານພາລະກິດທີ່ເຮັດໃຫ້ມະນຸດມາຮູ້ຈັກພຣະເຈົ້າ, ລະດັບຊັ້ນທີ່ແຕກຕ່າງກັນຂອງມະນຸດແມ່ນຖືກເປີດເຜີຍອອກ: ຄົນເຫຼົ່ານັ້ນທີ່ຮູ້ຈັກພຣະເຈົ້າແມ່ນຄຸນສົມບັດໃນການໄດ້ຮັບພຣະພອນຈາກພຣະເຈົ້າ ແລະ ຮັບສັນຍາຂອງພຣະອົງ ໃນຂະນະທີ່ຄົນເຫຼົ່ານັ້ນເຊິ່ງບໍ່ຮູ້ຈັກພຣະເຈົ້າບໍ່ມີຄຸນສົມບັດໃນ

ການຮັບພຣະພອນຂອງພຣະເຈົ້າ ແລະ ຮັບສັນຍາຂອງພຣະອົງ. ຄົນເຫຼົ່ານັ້ນທີ່ຮູ້ຈັກພຣະເຈົ້າແມ່ນຜູ້ໃກ້ຊິດຂອງພຣະເຈົ້າ ແລະ ຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພຣະເຈົ້າບໍ່ສາມາດເອີ້ນໄດ້ວ່າເປັນຜູ້ໃກ້ຊິດຂອງພຣະເຈົ້າ; ຜູ້ໃກ້ຊິດຂອງພຣະເຈົ້າສາມາດຮັບພຣະພອນຂອງພຣະເຈົ້າ ແຕ່ຄົນເຫຼົ່ານັ້ນທີ່ບໍ່ແມ່ນຜູ້ໃກ້ຊິດຂອງພຣະອົງບໍ່ສົມຄວນໄດ້ຮັບພາລະກິດໃດໆຂອງພຣະອົງ. ບໍ່ວ່າຈະເປັນການແກ້ແຄ້ນ, ການກັ່ນຕອງ ຫຼື ການພິພາກສາ, ທຸກສິ່ງເຫຼົ່ານີ້ກໍ່ມີເພື່ອໃຫ້ມະນຸດໄດ້ຮັບເອົາຄວາມຮູ້ຂອງພຣະເຈົ້າໃນທີ່ສຸດ ແລະ ເພື່ອມະນຸດຈະຍອມຢູ່ພາຍໃຕ້ພຣະເຈົ້າ, ນີ້ເປັນພຽງຜົນສະທ້ອນທີ່ຈະເຮັດໃຫ້ສຳເລັດໃນທີ່ສຸດ. ບໍ່ມີຂັ້ນຕອນໃດໃນພາລະກິດສາມຂັ້ນຕອນເປັນສິ່ງທີ່ລີ້ລັບ ແລະ ນີ້ເປັນຜົນປະໂຫຍດຕໍ່ຄວາມຮູ້ທີ່ມະນຸດມີກ່ຽວກັບພຣະເຈົ້າ ແລະ ຊ່ວຍໃຫ້ມະນຸດໄດ້ຮັບຄວາມຮູ້ທີ່ສົມບູນ ແລະ ຮອບຄອບຂຶ້ນກ່ຽວກັບພຣະເຈົ້າ. ພາລະກິດທັງໝົດນີ້ແມ່ນເພື່ອຜົນປະໂຫຍດຂອງມະນຸດ.

ພາລະກິດຂອງພຣະເຈົ້າເອງແມ່ນນິມິດທີ່ມະນຸດຕ້ອງຮູ້ ຍ້ອນມະນຸດບໍ່ສາມາດເຮັດພາລະກິດຂອງພຣະເຈົ້າໃຫ້ສຳເລັດໄດ້ ແລະ ມະນຸດກໍຄອບຄອງບໍ່ໄດ້. ພາລະກິດສາມຂັ້ນຕອນແມ່ນຄວາມສົມບູນຂອງການຄຸ້ມຄອງຂອງພຣະເຈົ້າ ແລະ ບໍ່ມີນິມິດໃດທີ່ຈະຍິ່ງໃຫຍ່ເກີນກວ່ານີ້ທີ່ມະນຸດຄວນຮູ້ຈັກ. ຖ້າມະນຸດບໍ່ຮູ້ນິມິດທີ່ຍິ່ງໃຫຍ່ນີ້, ມັນກໍບໍ່ແມ່ນເລື່ອງງ່າຍທີ່ຈະຮູ້ຈັກພຣະເຈົ້າ, ມັນບໍ່ແມ່ນເລື່ອງງ່າຍທີ່ຈະເຂົ້າໃຈຄວາມປະສົງຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ເສັ້ນທາງທີ່ມະນຸດເດີນຕາມກໍ່ຈະຍາກເລີ່ມລຳບາກຂຶ້ນເລື້ອຍໆ. ຖ້າປາສະຈາກນິມິດ, ມະນຸດຈະບໍ່ສາມາດມາໄກໄດ້ສໍ່ານີ້. ມັນແມ່ນນິມິດນີ້ເອງທີ່ຄຸ້ມກັນມະນຸດຈົນຮອດປັດຈຸບັນ ແລະ ເປັນສິ່ງທີ່ຈັດຕຽມການປົກປ້ອງທີ່ຍິ່ງໃຫຍ່ທີ່ສຸດໃຫ້ກັບມະນຸດ. ໃນອະນາຄົດ, ຄວາມຮູ້ຂອງພວກເຈົ້າຕ້ອງເລິກເຊິ່ງລົງ ແລະ ພວກເຈົ້າຕ້ອງມາຮູ້ຈັກຄວາມສົມບູນຂອງຄວາມປະສົງຂອງພຣະອົງ ແລະ ແກ່ນແທ້ຂອງພາລະກິດທີ່ເຕັມໄປດ້ວຍສະຕິປັນຍາຂອງພຣະອົງພາຍໃນພາລະກິດສາມຂັ້ນຕອນ. ນີ້ຄືຄວາມສາມາດທີ່ແທ້ຈິງຂອງພວກເຈົ້າ. ຂັ້ນຕອນສຸດທ້າຍຂອງພາລະກິດບໍ່ໄດ້ຢືນຢ່າງໂດດດ່ຽວ ແຕ່ເປັນສ່ວນໜຶ່ງຂອງພາລະກິດທັງໝົດທີ່ກໍ່ຕັ້ງຂຶ້ນໂດຍການໂຮມກັບສອງຂັ້ນຕອນທີ່ຜ່ານມາ ເຊິ່ງເວົ້າໄດ້ວ່າ ມັນເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພາລະກິດແຫ່ງຄວາມລອດພົ້ນສຳເລັດລົງ ໂດຍການປະຕິບັດພຽງແຕ່ໜຶ່ງໃນສາມຂັ້ນຂອງພາລະກິດນັ້ນ. ເຖິງແມ່ນວ່າ ຂັ້ນຕອນສຸດທ້າຍຂອງພາລະກິດແມ່ນສາມາດຊ່ວຍຊີວິດມະນຸດຢ່າງສົມບູນ, ນີ້ບໍ່ໄດ້ໝາຍຄວາມວ່າ ມັນຈຳເປັນທີ່ຈະຕ້ອງປະຕິບັດຂັ້ນຕອນດຽວນີ້ດ້ວຍຕົນມັນເອງເທົ່ານັ້ນ ແລະ ສອງຂັ້ນຕອນທີ່ຜ່ານມາຂອງພາລະກິດບໍ່ຈຳເປັນໃນການຊ່ວຍຊີວິດມະນຸດໃຫ້ອອກຈາກອິດທິພົນຂອງຊາຕານ. ບໍ່ມີຂັ້ນຕອນໃດໃນທັງສາມຂັ້ນຕອນທີ່ຖືວ່າ ເປັນນິມິດດຽວທີ່ບັນດາມວນມະນຸດຊາດຕ້ອງຮູ້ຈັກ ຍ້ອນຄວາມສົມບູນຂອງພາລະກິດແຫ່ງຄວາມລອດພົ້ນແມ່ນພາລະກິດສາມຂັ້ນຕອນ ໂດຍທີ່ບໍ່ແມ່ນຂັ້ນຕອນດຽວເທົ່ານັ້ນ. ຕາບໃດທີ່ພາລະກິດແຫ່ງຄວາມລອດພົ້ນຍັງບໍ່ທັນສຳເລັດ, ການຄຸ້ມຄອງຂອງພຣະເຈົ້າຈະບໍ່ສາມາດສິ້ນສຸດໄດ້ຢ່າງສົມບູນ. ການເປັນຢູ່ຂອງພຣະເຈົ້າ, ອຸປະນິໄສຂອງພຣະອົງ ແລະ ສະຕິປັນຍາຂອງພຣະອົງຖືກສຳແດງອອກໃນຄວາມສົມບູນຂອງພາລະກິດແຫ່ງຄວາມລອດພົ້ນ; ພວກມັນບໍ່ໄດ້ຖືກເປີດເຜີຍໃຫ້ມະນຸດຄົນໃດຕັ້ງແຕ່ຕອນເລີ່ມຕົ້ນແລ້ວ ແຕ່ຖືກສຳແດງອອກເທື່ອ

ລະໜ້ອຍໃນພາລະກິດແຫ່ງຄວາມລອດພົ້ນ. ແຕ່ລະຂັ້ນຕອນຂອງພາລະກິດແຫ່ງຄວາມລອດພົ້ນສຳແດງໃຫ້ເຫັນເຖິງສ່ວນໜຶ່ງຂອງອຸປະນິໄສຂອງພຣະເຈົ້າ ແລະ ສ່ວນໜຶ່ງຂອງການເປັນຢູ່ຂອງພຣະອົງ; ບໍ່ແມ່ນທຸກຂັ້ນຕອນໃດໃນພາລະກິດສາມາດສຳແດງເຖິງຄວາມສົມບູນຂອງການເປັນຢູ່ຂອງພຣະອົງໂດຍກົງ ແລະ ຢ່າງຄົບຖ້ວນ. ເມື່ອເປັນດັ່ງນັ້ນ, ພາລະກິດແຫ່ງຄວາມລອດພົ້ນຈຶ່ງພຽງແຕ່ສາມາດເຮັດໃຫ້ສິ້ນສຸດລົງເມື່ອທັງພາລະກິດສາມຂັ້ນຕອນສຳເລັດລົງແລ້ວ ແລະ ດ້ວຍເຫດນັ້ນ ຄວາມຮູ້ຂອງມະນຸດທີ່ກ່ຽວກັບຄວາມສົມບູນຂອງພຣະເຈົ້າຈຶ່ງບໍ່ສາມາດແຍກອອກຈາກພາລະກິດສາມຂັ້ນຕອນຂອງພຣະເຈົ້າໄດ້. ສິ່ງທີ່ມະນຸດໄດ້ຮັບຈາກໜຶ່ງຂັ້ນຕອນຂອງພາລະກິດເປັນພຽງອຸປະນິໄສຂອງພຣະເຈົ້າທີ່ຖືກສຳແດງອອກມາຜ່ານສ່ວນໜຶ່ງຂອງພາລະກິດຂອງພຣະອົງ. ມັນບໍ່ສາມາດແທນອຸປະນິໄສ ແລະ ການເປັນຢູ່ ເຊິ່ງສຳແດງອອກໃນຂັ້ນຕອນກ່ອນໜ້າ ຫຼື ຕໍ່ມາໄດ້. ນັ້ນກໍຍ້ອນວ່າ ພາລະກິດແຫ່ງການໄຖ່ມະນຸດຊາດບໍ່ສາມາດເຮັດໃຫ້ສຳເລັດລົງທັນທີໃນລະຫວ່າງຊ່ວງໄລຍະໃດໜຶ່ງ ຫຼື ໃນສະຖານທີ່ແຫ່ງໜຶ່ງ ແຕ່ມັນຈະເລິກເຊິ່ງລົງເທື່ອລະໜ້ອຍໂດຍອີງຕາມລະດັບການພັດທະນາຂອງມະນຸດໃນແຕ່ລະເວລາ ແລະ ສະຖານທີ່. ມັນແມ່ນພາລະກິດທີ່ປະຕິບັດໃນຂັ້ນຕອນທັງໝົດ ແລະ ມັນບໍ່ສຳເລັດໄດ້ໃນພຽງຂັ້ນຕອນດຽວ. ດ້ວຍເຫດນັ້ນ, ສະຕິປັນຍາທັງໝົດຂອງພຣະເຈົ້າຈຶ່ງຖືກຫຼໍ່ເປັນແກ້ວພະລຶກໃນທັງສາມຂັ້ນຕອນ ແທນທີ່ຈະຢູ່ໃນຂັ້ນຕອນໃດໜຶ່ງ. ການເປັນຢູ່ຂອງພຣະອົງ ແລະ ສະຕິປັນຍາທັງໝົດຂອງພຣະອົງຖືກວາງລົງໃນທັງສາມຂັ້ນຕອນນີ້ ແລະ ແຕ່ລະຂັ້ນຕອນກໍປະກອບດ້ວຍການເປັນຢູ່ຂອງພຣະອົງ ແລະ ແຕ່ລະຂັ້ນຕອນເປັນການບັນທຶກຂອງສະຕິປັນຍາຂອງພາລະກິດຂອງພຣະອົງ. ມະນຸດຄວນຮູ້ຈັກອຸປະນິໄສທັງໝົດຂອງພຣະເຈົ້າ ເຊິ່ງສຳແດງອອກຜ່ານທັງສາມຂັ້ນຕອນນີ້. ການເປັນຢູ່ຂອງພຣະເຈົ້າທັງໝົດແມ່ນສິ່ງທີ່ສຳຄັນທີ່ສຸດໃຫ້ກັບບັນດາມວນມະນຸດຊາດ ແລະ ຖ້າມະນຸດບໍ່ມີຄວາມຮູ້ນີ້ ເມື່ອພວກເຂົານະມັດສະການພຣະເຈົ້າ, ພວກເຂົາກໍຈະບໍ່ໄດ້ແຕກຕ່າງຈາກຄົນເຫຼົ່ານັ້ນທີ່ນະມັດສະການພຣະພຸດທະເຈົ້າ. ພາລະກິດຂອງພຣະເຈົ້າທ່າມກາງມະນຸດແມ່ນບໍ່ໄດ້ຖືກເຊື່ອງຈາກມະນຸດ ແລະ ຄົນເຫຼົ່ານັ້ນທຸກຄົນທີ່ນະມັດສະການພຣະເຈົ້າຄວນຮູ້. ເມື່ອພຣະເຈົ້າປະຕິບັດທັງພາລະກິດສາມຂັ້ນຕອນແຫ່ງຄວາມລອດພົ້ນທ່າມກາງມະນຸດ, ມະນຸດຄວນຮູ້ຈັກການສຳແດງເຖິງສິ່ງທີ່ພຣະອົງມີ ແລະ ເປັນຢູ່ໃນລະຫວ່າງພາລະກິດສາມຂັ້ນຕອນ. ນີ້ແມ່ນສິ່ງທີ່ມະນຸດຕ້ອງເຮັດໃຫ້ສຳເລັດ. ສິ່ງທີ່ພຣະເຈົ້າເຊື່ອງຈາກມະນຸດແມ່ນສິ່ງທີ່ມະນຸດບໍ່ສາມາດໄດ້ຮັບ ແລະ ສິ່ງທີ່ມະນຸດບໍ່ຄວນຮູ້ ໃນຂະນະສິ່ງທີ່ພຣະເຈົ້າສຳແດງໃຫ້ມະນຸດເຫັນແມ່ນສິ່ງທີ່ມະນຸດຄວນຮູ້ ແລະ ສິ່ງທີ່ມະນຸດຄວນມີ. ແຕ່ລະຂັ້ນຕອນໃນທັງພາລະກິດສາມຂັ້ນຕອນແມ່ນປະຕິບັດໂດຍອີງຕາມພື້ນຖານຂອງຂັ້ນຕອນກ່ອນໜ້າ; ມັນບໍ່ໄດ້ປະຕິບັດຢ່າງອິດສະຫຼະ ແລະ ແຍກຈາກພາລະກິດແຫ່ງຄວາມລອດພົ້ນ. ເຖິງແມ່ນວ່າ ຈະມີຄວາມແຕກຕ່າງຫຼາຍໃນຍຸກ ແລະ ພາລະກິດທີ່ຕ້ອງປະຕິບັດ, ແຕ່ຄວາມລອດພົ້ນຂອງມະນຸດກໍຍັງເປັນຫົວໃຈສຳຄັນຂອງມັນ ແລະ ແຕ່ລະຂັ້ນຕອນຂອງພາລະກິດແຫ່ງຄວາມລອດພົ້ນແມ່ນເລິກເຊິ່ງກວ່າຂັ້ນຕອນກ່ອນໜ້າ. ແຕ່ລະຂັ້ນຕອນຂອງພາລະກິດສືບຕໍ່ຈາກພື້ນຖານໃນຂັ້ນຕອນກ່ອນໜ້າ ເຊິ່ງບໍ່ສາມາດປະຖິ້ມໄດ້. ດ້ວຍວິທີນີ້ເອງ, ໃນພາລະກິດທີ່ໃໝ່ສະເໝີ ແລະ ບໍ່ເຄີຍເກົ່າຂອງພຣະອົງ,

ພຣະເຈົ້າຍັງຄົງສຳແດງລັກສະນະຕ່າງໆຂອງອຸປະນິໄສຂອງພຣະອົງຢູ່ສະເໝີ ເຊິ່ງເປັນສິ່ງທີ່ບໍ່ເຄີຍສຳແດງໃຫ້ມະນຸດມາກ່ອນ ແລະ ເປີດເຜີຍພາລະກິດໃໝ່ຂອງພຣະອົງ ແລະ ການເປັນຢູ່ແບບໃໝ່ຂອງພຣະອົງໃຫ້ມະນຸດຢູ່ສະເໝີ ແລະ ເຖິງແມ່ນວ່າ ທະຫານຍາມເກົ່າແກ່ທີ່ເຄັ່ງສາສະໜາໄດ້ເຮັດທຸກວິທີທາງເພື່ອຂັດຂືນສິ່ງນີ້ ແລະ ຕໍ່ຕ້ານຢ່າງເປີດເຜີຍ, ພຣະເຈົ້າຍັງປະຕິບັດພາລະກິດໃໝ່ທີ່ພຣະອົງເຈດຈະນາທີ່ຈະເຮັດຢູ່ສະເໝີ. ພາລະກິດຂອງພຣະເຈົ້າປ່ຽນແປງຢູ່ສະເໝີ ແລະ ດ້ວຍເຫດນີ້ ມັນກໍປະເຊີນກັບການຕໍ່ຕ້ານຂອງມະນຸດຢູ່ສະເໝີ. ດ້ວຍເຫດນັ້ນ, ອຸປະນິໄສຂອງພຣະອົງຈຶ່ງປ່ຽນແປງຢູ່ສະເໝີພ້ອມກັບຍຸກ ແລະ ຜູ້ຮັບພາລະກິດຂອງພຣະອົງເຊັ່ນກັນ. ຍິ່ງໄປກວ່ານັ້ນ, ພຣະອົງປະຕິບັດພາລະກິດທີ່ບໍ່ມີປະຕິບັດມາກ່ອນຢ່າງສະເໝີ ແມ່ນແຕ່ປະຕິບັດພາລະກິດທີ່ປະກົດໃຫ້ມະນຸດເຫັນເປັນການຂັດແຍ້ງກັບພາລະກິດທີ່ປະຕິບັດກ່ອນໜ້ານີ້ ເພື່ອໃຫ້ມະນຸດໄດ້ຕໍ່ຕ້ານ. ມະນຸດສາມາດຍອມຮັບພຽງແຕ່ພາລະກິດໜຶ່ງປະເພດ ຫຼື ວິທີການປະຕິບັດໜຶ່ງຢ່າງເທົ່ານັ້ນ ແລະ ມັນຍາກສຳລັບມະນຸດທີ່ຈະຍອມຮັບພາລະກິດ ຫຼື ວິທີການປະຕິບັດທີ່ບໍ່ຖືກກັນ ຫຼື ສູງກວ່າ. ແຕ່ພຣະວິນຍານບໍລິສຸດປະຕິບັດພາລະກິດໃໝ່ຢູ່ສະເໝີ ແລະ ດ້ວຍເຫດນັ້ນ ຈຶ່ງປະກົດມີກຸ່ມຜູ້ຊ່ຽວຊານທາງສາສະໜາຫຼາຍກຸ່ມທີ່ຕໍ່ຕ້ານພາລະກິດໃໝ່ຂອງພຣະເຈົ້າ. ຄົນເຫຼົ່ານີ້ໄດ້ກາຍມາເປັນຜູ້ຊ່ຽວຊານຢ່າງແນ່ນອນ ເພາະມະນຸດບໍ່ມີຄວາມຮູ້ວ່າ ພຣະເຈົ້າໃໝ່ສະເໝີ ແລະ ບໍ່ເຄີຍເກົ່າເລີຍ ແລະ ບໍ່ມີຄວາມຮູ້ກ່ຽວກັບຫຼັກການຂອງພາລະກິດຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ແມ່ນບໍ່ມີຄວາມຮູ້ກ່ຽວກັບຫຼາຍວິທີທີ່ພຣະເຈົ້າຊ່ວຍຊີວິດມະນຸດ. ເມື່ອເປັນດັ່ງນັ້ນ, ມະນຸດກໍບໍ່ສາມາດເວົ້າໄດ້ທັງໝົດວ່າ ມັນເປັນພາລະກິດທີ່ມາຈາກພຣະວິນຍານບໍລິສຸດ ຫຼື ບໍ່ ແລະ ມັນເປັນພາລະກິດຂອງພຣະເຈົ້າພຣະອົງເອງບໍ. ຫຼາຍຄົນທີ່ຍຶດຕິດກັບທ່າທີທີ່ວ່າ ຖ້າບາງສິ່ງສອດຄ່ອງກັບພຣະທຳທີ່ມາກ່ອນໜ້າ, ພວກເຂົາກໍຈະຍອມຮັບມັນ ແລະ ຖ້າມີຄວາມແຕກຕ່າງກັບພາລະກິດທີ່ມາກ່ອນໜ້າ, ພວກເຂົາກໍຈະຕໍ່ຕ້ານ ແລະ ປະຕິເສດມັນ. ໃນປັດຈຸບັນ, ພວກເຈົ້າທັງໝົດບໍ່ໄດ້ດຳລົງຊີວິດໂດຍໃຊ້ຫຼັກການດັ່ງກ່າວບໍ? ທັງພາລະກິດສາມຂັ້ນຕອນແຫ່ງຄວາມລອດພົ້ນບໍ່ມີຜົນສະທ້ອນຫຍັງຕໍ່ພວກເຈົ້າ ແລະ ມີຄົນເຫຼົ່ານັ້ນທີ່ເຊື່ອວ່າ ສອງຂັ້ນຕອນກ່ອນໜ້າຂອງພາລະກິດນັ້ນເປັນພາລະທີ່ພວກເຂົາບໍ່ຈຳເປັນຕ້ອງຮູ້ແທ້ໆ. ພວກເຂົາຄິດວ່າ ຂັ້ນຕອນເຫຼົ່ານີ້ບໍ່ຄວນປະກາດໃຫ້ກັບມວນຊົນ ແລະ ຄວນຖອນຄືນໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອຜູ້ຄົນຈະບໍ່ຮູ້ສຶກໜັກໃຈ ຍ້ອນສອງຂັ້ນຕອນກ່ອນໜ້າທັງໃນພາລະກິດສາມຂັ້ນຕອນ. ຫຼາຍຄົນເຊື່ອວ່າ ການເຮັດໃຫ້ທັງສອງຂັ້ນຕອນກ່ອນໜ້າຂອງພາລະກິດເປັນທີ່ຮູ້ຈັກແມ່ນບາດກ້າວທີ່ໄກເກີນໄປ ແລະ ບໍ່ໄດ້ຊ່ວຍຫຍັງໃນການຮູ້ຈັກພຣະເຈົ້າ, ນີ້ຄືສິ່ງທີ່ພວກເຈົ້າຄິດ. ໃນປັດຈຸບັນ, ພວກເຈົ້າທຸກຄົນເຊື່ອວ່າ ມັນຖືກຕ້ອງທີ່ຈະປະຕິບັດແບບນີ້ ແຕ່ມື້ໜຶ່ງ ພວກເຈົ້າຈະເຂົ້າໃຈເຖິງຄວາມສຳຄັນຂອງພາລະກິດຂອງເຮົາ: ຈົ່ງຮູ້ໄວ້ວ່າ ເຮົາບໍ່ປະຕິບັດພາລະກິດທີ່ບໍ່ມີຄວາມສຳຄັນ. ເມື່ອເຮົາປະກາດທັງພາລະກິດສາມຂັ້ນຕອນໃຫເຈົ້າ, ພວກມັນຕ້ອງເປັນປະໂຫຍດໃຫ້ກັບພວກເຈົ້າ; ເມື່ອທັງພາລະກິດສາມຂັ້ນຕອນເປັນຫົວໃຈຂອງການຄຸ້ມຄອງທັງໝົດຂອງພຣະເຈົ້າ, ພວກມັນຕ້ອງກາຍມາເປັນຈຸດສົນໃຈຂອງທຸກໆຄົນທົ່ວທັງຈັກກະວານ. ມື້ໜຶ່ງພວກເຈົ້າຈະຮັບຮູ້ຄວາມສຳຄັນຂອງພາລະກິດນີ້. ຈົ່ງຮູ້ໄວ້ວ່າ ພວກເຈົ້າຕໍ່ຕ້ານພາລະກິດຂອງພຣະເຈົ້າ

ຫຼື ໃຊ້ແນວຄິດຂອງພວກເຈົ້າເອງເພື່ອປະເມີນພາລະກິດໃນປັດຈຸບັນ ຍ້ອນພວກເຈົ້າບໍ່ຮູ້ຈັກຫຼັກການ ການປະຕິບັດພາລະກິດຂອງພຣະເຈົ້າ ແລະ ຍ້ອນການທີ່ພວກເຈົ້າປະຕິບັດຕໍ່ພາລະກິດຂອງພຣະວິນຍານບໍລິສຸດຢ່າງພໍແລ້ວມືແລ້ວຕີນ. ການທີ່ພວກເຈົ້າຕໍ່ຕ້ານພຣະເຈົ້າ ແລະ ຂັດຂວາງພາລະກິດຂອງພຣະວິນຍານບໍລິສຸດແມ່ນມາຈາກແນວຄິດຂອງພວກເຈົ້າ ແລະ ຄວາມອວດດີໂດຍທຳມະຊາດ. ມັນບໍ່ແມ່ນຍ້ອນພາລະກິດຂອງພຣະເຈົ້າຜິດພາດ ແຕ່ຍ້ອນພວກເຈົ້າເປັນຄົນທີ່ບໍ່ເຊື່ອຟັງໂດຍທຳມະຊາດ. ຫຼັງຈາກທີ່ພົບຄວາມເຊື່ອໃນພຣະເຈົ້າຂອງພວກເຂົາ, ບາງຄົນບໍ່ສາມາດເວົ້າຢ່າງແນ່ນອນວ່າ ມະນຸດມາຈາກໃສ ແຕ່ພວກເຂົາຍັງກ້າກ່າວຄຳປາໄສໃນທີ່ສາທາລະນະທີ່ປະເມີນຄວາມຖືກຕ້ອງ ແລະ ຄວາມຜິດພາດຂອງພາລະກິດຂອງພຣະວິນຍານບໍລິສຸດ. ພວກເຂົາເຖິງກັບສັ່ງສອນອັກຄະສາວົກຜູ້ທີ່ມີພາລະກິດໃໝ່ຂອງພຣະວິນຍານບໍລິສຸດ ໂດຍສະແດງຄວາມຄິດເຫັນ ແລະ ເວົ້າສິ່ງທີ່ບໍ່ຄວນເວົ້າອອກມາ; ຄວາມເປັນມະນຸດຂອງພວກເຂົາຕໍ່າຫຼາຍ ແລະ ບໍ່ມີຄວາມສຳນຶກໃນຕົວພວກເຂົາແມ່ນແຕ່ໜ້ອຍດຽວ. ມື້ທີ່ຄົນປະເພດນີ້ຈະຖືກປະຕິເສດໂດຍພາລະກິດຂອງພຣະວິນຍານບໍລິສຸດ ແລະ ຖືກເຜົາໄໝ້ດ້ວຍໄຟແຫ່ງນະຮົກຈະບໍ່ມາຮອດບໍ? ພວກເຂົາບໍ່ຮູ້ຈັກພາລະກິດຂອງພຣະເຈົ້າ ແຕ່ວິຈານພາລະກິດຂອງພຣະອົງແທນ ແລະ ຍັງພະຍາຍາມແນະນຳພຣະເຈົ້າກ່ຽວກັບວິທີການປະຕິບັດພາລະກິດ. ຄົນທີ່ບໍ່ມີເຫດຜົນແບບນີ້ຈະຮູ້ຈັກພຣະເຈົ້າໄດ້ແນວໃດ? ມະນຸດມາຮູ້ຈັກພຣະເຈົ້າໃນໄລຍະຂະບວນການສະແຫວງຫາ ແລະ ປະສົບກັບພຣະອົງ; ມັນບໍ່ແມ່ນຍ້ອນການວິຈານຕາມຄວາມອຳເພີໃຈທີ່ເຮັດໃຫ້ມະນຸດມາຮູ້ຈັກພຣະເຈົ້າຜ່ານການເຮັດໃຫ້ສະຫວ່າງໂດຍພຣະວິນຍານບໍລິສຸດ. ເມື່ອຄົນມີຄວາມຮູ້ກ່ຽວກັບພຣະເຈົ້າຢ່າງຖືກຕ້ອງຫຼາຍສໍ່າໃດ, ພວກເຂົາກໍຈະຕໍ່ຕ້ານພຣະອົງໜ້ອຍສໍ່ານັ້ນ. ໃນທາງກົງກັນຂ້າມ, ມະນຸດຮູ້ຈັກພຣະເຈົ້າໜ້ອຍສໍ່າໃດ, ມັນກໍມີຄວາມເປັນໄປໄດ້ທີ່ພວກເຂົາຈະຕໍ່ຕ້ານພຣະອົງຫຼາຍສໍ່ານັ້ນ. ແນວຄິດຂອງເຈົ້າ, ທຳມະຊາດເກົ່າແກ່ຂອງເຈົ້າ ແລະ ຄວາມເປັນມະນຸດ, ບຸກຄະລິກ ແລະ ທັດສະນະທາງສິນທຳຂອງເຈົ້າແມ່ນ "ຕົ້ນທຶນ" ທີ່ເຮັດໃຫ້ຕໍ່ຕ້ານພຣະເຈົ້າ ແລະ ຍິ່ງສິນທຳຂອງເຈົ້າເສື່ອມຊາມເທົ່ານັ້ນ, ຄຸນສົມບັດຂອງເຈົ້າເປັນຕາລັງກຽດສໍ່າໃດ ແລະ ຄວາມເປັນມະນຸດຂອງເຈົ້າຕ້ອຍຕໍ່າສໍ່າໃດ, ເຈົ້າກໍຈະກາຍເປັນສັດຕູຂອງພຣະເຈົ້າຫຼາຍສໍ່ານັ້ນ. ຄົນເຫຼົ່ານັ້ນທີ່ປະກອບມີແນວຄິດທີ່ຝັງແໜ້ນ ແລະ ຄົນທີ່ມີອຸປະນິໄສທີ່ເຊື່ອວ່າຕົນເອງດີແຮງເປັນສັດຕູກັບພຣະເຈົ້າຜູ້ມາບັງເກີດເປັນມະນຸດ, ຄົນປະເພດນີ້ກໍເປັນຜູ້ຕໍ່ຕ້ານພຣະຄຣິດ. ຖ້າແນວຄິດຂອງເຈົ້າບໍ່ໄດ້ຮັບການແກ້ໄຂ, ມັນຈະຕໍ່ຕ້ານພຣະເຈົ້າຢູ່ສະເໝີ; ເຈົ້າຈະບໍ່ສາມາດເຂົ້າກັບພຣະເຈົ້າໄດ້ຈັກເທື່ອ ແລະ ຈະຫ່າງໄກຈາກພຣະອົງຕະຫຼອດເວລາ.

ມີພຽງແຕ່ການປະຖິ້ມແນວຄິດເກົ່າແກ່ຂອງເຈົ້າເທົ່ານັ້ນ ເຈົ້າຈຶ່ງຈະໄດ້ຮັບຄວາມຮູ້ໃໝ່, ແຕ່ຄວາມຮູ້ເກົ່າກໍບໍ່ຈຳເປັນຕ້ອງແມ່ນທຽບເທົ່າກັບແນວຄິດເກົ່າ. "ແນວຄິດ" ໝາຍເຖິງສິ່ງທີ່ມະນຸດຈິນຕະນາການທີ່ບໍ່ຖືກກັບຄວາມເປັນຈິງ. ຖ້າຄວາມຮູ້ເກົ່າເປັນສິ່ງທີ່ຫຼ້າສະໄໝໃນຍຸກເກົ່າແລ້ວ ແລະ ຢຸດມະນຸດຈາກການເຂົ້າສູ່ພາລະກິດໃໝ່, ຄວາມຮູ້ດັ່ງກ່າວກໍຈະເປັນແນວຄິດເຊັ່ນກັນ. ຖ້າມະນຸດມີວິທີທີ່ຖືກຕ້ອງໃນການເຂົ້າເຖິງຄວາມຮູ້ດັ່ງກ່າວ ແລະ ສາມາດມາຮູ້ຈັກກັບພຣະເຈົ້າຈາກລັກສະນະທີ່

ແຕກຕ່າງກັນຫຼາຍຢ່າງ ໂດຍປະສົມສິ່ງທີ່ເກົ່າແກ່ ແລະ ໃໝ່, ແລ້ວຄວາມຮູ້ເກົ່າແກ່ກໍຈະກາຍເປັນສິ່ງທີ່ສາມາດຊ່ວຍເຫຼືອມະນຸດໄດ້ ແລະ ໄດ້ກາຍມາເປັນພື້ນຖານທີ່ເຮັດໃຫ້ມະນຸດເຂົ້າສູ່ຍຸກໃໝ່. ບົດຮຽນຂອງການຮູ້ຈັກພຣະເຈົ້າຕ້ອງການໃຫ້ເຈົ້າເຂົ້າໃຈຫຼັກການຫຼາຍຢ່າງດ້ວຍຄວາມຊ່ຽວຊານ: ວິທີການເຂົ້າເຖິງເສັ້ນທາງສູ່ການຮູ້ຈັກພຣະເຈົ້າ, ຄວາມຈິງທີ່ເຈົ້າຕ້ອງເຂົ້າໃຈເພື່ອຮູ້ຈັກພຣະເຈົ້າ ແລະ ວິທີການປະຖິ້ມແນວຄິດ ແລະ ອຸປະນິໄສເດີມຂອງເຈົ້າ ເພື່ອເຈົ້າຈະຍອມຢູ່ພາຍໃຕ້ການຈັດການຂອງພາລະກິດໃໝ່ຂອງພຣະເຈົ້າ. ຖ້າເຈົ້ານຳໃຊ້ຫຼັກການເຫຼົ່ານີ້ເປັນພື້ນຖານຂອງການເຂົ້າສູ່ບົດຮຽນແຫ່ງການຮູ້ຈັກພຣະເຈົ້າ ແລ້ວຄວາມຮູ້ຂອງເຈົ້າຈະເລິກເຊິ່ງຂຶ້ນເຕີ່ມອີກເລື້ອຍໆ. ຖ້າເຈົ້າມີຄວາມຮູ້ທີ່ຊັດເຈນກ່ຽວກັບພາລະກິດສາມຂັ້ນຕອນ ເຊິ່ງເວົ້າໄດ້ວ່າ ເປັນຂອງແຜນການຄຸ້ມຄອງທັງໝົດຂອງພຣະເຈົ້າ ແລະ ຖ້າຫາກເຈົ້າສາມາດທຽບສຳພັນສອງຂັ້ນຕອນທີ່ກ່ອນໜ້າຂອງພາລະກິດຂອງພຣະເຈົ້າກັບຂັ້ນຕອນໃນປັດຈຸບັນ ແລະ ເຫັນໄດ້ວ່າ ມັນຄືພາລະກິດທີ່ພຣະເຈົ້າອົງດຽວປະຕິບັດໃຫ້ສຳເລັດ, ເຈົ້າກໍຈະບໍ່ມີພື້ນຖານທີ່ໜັກແໜ້ນທີ່ຫາປຽບບໍ່ໄດ້ແລ້ວ. ມີພຽງແຕ່ພຣະເຈົ້າອົງດຽວທີ່ປະຕິບັດພາລະກິດສາມຂັ້ນຕອນ; ນີ້ຄືນິມິດທີ່ຍິ່ງໃຫຍ່ທີ່ສຸດ ແລະ ນີ້ເປັນເສັ້ນທາງສູ່ການຮູ້ຈັກພຣະເຈົ້າ. ມີພຽງແຕ່ພຣະເຈົ້າພຣະອົງເອງເທົ່ານັ້ນທີ່ຈະສາມາດປະຕິບັດພາລະກິດສາມຂັ້ນຕອນສຳເລັດໄດ້ ແລະ ບໍ່ມີໃຜທີ່ສາມາດປະຕິບັດພາລະກິດດັ່ງກ່າວແທນພຣະອົງໄດ້, ນີ້ກໍ່ເພື່ອເວົ້າວ່າມີພຽງພຣະເຈົ້າພຣະອົງເອງທີ່ສາມາດປະຕິບັດພາລະກິດຂອງພຣະອົງເອງຕັ້ງແຕ່ຕົ້ນຈົນຮອດປັດຈຸບັນ. ເຖິງແມ່ນວ່າ ພາລະກິດສາມຂັ້ນຕອນຂອງພຣະເຈົ້າຖືກນຳໄປປະຕິບັດໃນຍຸກ ແລະ ສະຖານທີ່ທີ່ແຕກຕ່າງກັນ ແລະ ເຖິງແມ່ນວ່າພາລະກິດຂອງແຕ່ລະຢ່າງແຕກຕ່າງກັນ, ມີພຽງແຕ່ພຣະເຈົ້າອົງດຽວເທົ່ານັ້ນທີ່ປະຕິບັດພາລະກິດທັງໝົດ. ຈາກນິມິດທັງໝົດ, ນີ້ຄືນິມິດທີ່ຍິ່ງໃຫຍ່ທີ່ສຸດທີ່ມະນຸດຄວນຮູ້ ແລະ ຖ້າມະນຸດສາມາດຮັບຮູ້ຢ່າງສົມບູນ ເຂົາກໍຈະສາມາດຢືນໄດ້ຢ່າງໜັກແໜ້ນ. ໃນປັດຈຸບັນ ບັນຫາທີ່ໃຫຍ່ທີ່ສຸດທີ່ຫຼາກຫຼາຍສາສະໜາ ແລະ ນິກາຍກຳລັງປະເຊີນຢູ່ແມ່ນ ພວກເຂົາບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ ແລະ ບໍ່ສາມາດຈຳແນກຄວາມແຕກຕ່າງລະຫວ່າງພາລະກິດຂອງພຣະວິນຍານບໍລິສຸດ ແລະ ພາລະກິດທີ່ບໍ່ແມ່ນຂອງພຣະວິນຍານບໍລິສຸດ, ດ້ວຍເຫດນີ້ ພວກເຂົາຈຶ່ງບໍ່ສາມາດບອກໄດ້ວ່າຂັ້ນຕອນໃນປັດຈຸບັນຂອງພາລະກິດນີ້ຖືກປະຕິບັດໂດຍພຣະເຈົ້າພຣະເຢໂຮວາ ຄືກັບສອງຂັ້ນຕອນກ່ອນໜ້າຂອງພາລະກິດ ຫຼື ບໍ່. ເຖິງແມ່ນວ່າ ຜູ້ຄົນຕິດຕາມພຣະເຈົ້າ, ຫຼາຍຄົນກໍຍັງບໍ່ສາມາດບອກໄດ້ວ່າມັນເປັນຫົນທາງທີ່ຖືກຕ້ອງ ຫຼື ບໍ່. ມະນຸດກັງວົນວ່າ ຫົນທາງນີ້ແມ່ນຫົນທາງທີ່ນຳໂດຍພຣະເຈົ້າພຣະອົງເອງເປັນການສ່ວນຕົວ ຫຼື ບໍ່ ແລະ ການມາບັງເກີດເປັນມະນຸດຂອງພຣະເຈົ້າເປັນຄວາມຈິງ ຫຼື ບໍ່ ແລະ ຫຼາຍຄົນຍັງບໍ່ຮູ້ເລີຍກ່ຽວກັບວິທີການແຍກແຍະສິ່ງເຫຼົ່ານັ້ນ. ຄົນເຫຼົ່ານັ້ນທີ່ຕິດຕາມພຣະເຈົ້າບໍ່ສາມາດກຳນົດຫົນທາງ ແລະ ດ້ວຍເຫດນັ້ນ ຂໍ້ຄວາມທີ່ໄດ້ກ່າວອອກມາກໍມີພຽງແຕ່ຜົນສະທ້ອນບາງສ່ວນທ່າມກາງຄົນເຫຼົ່ານີ້ເທົ່ານັ້ນ ແລະ ບໍ່ສາມາດເຕັມປະສິດຕິພາບຢ່າງສົມບູນໄດ້ ແລະ ດ້ວຍເຫດນີ້ສິ່ງນີ້ກໍມີຜົນກະທົບຕໍ່ການດຳລົງຊີວິດຂອງຜູ້ຄົນເຫຼົ່ານັ້ນ; ຖ້າຫາກມະນຸດສາມາດເຫັນພາລະກິດສາມຂັ້ນຕອນທີ່ພຣະເຈົ້າພຣະອົງເອງປະຕິບັດໃນເວລາທີ່ແຕກຕ່າງກັນ, ໃນສະຖານທີ່ໆແຕກຕ່າງກັນ ແລະ

ໃນຜູ້ຄົນທີ່ແຕກຕ່າງກັນ, ຖ້າມະນຸດສາມາດເຫັນວ່າ ເຖິງແມ່ນພາລະກິດຈະແຕກຕ່າງກັນ ແຕ່ມັນກໍຖືກປະຕິບັດໂດຍພຣະເຈົ້າອົງດຽວທັງໝົດ ແລະ ເມື່ອພາລະກິດຖືກປະຕິບັດໂດຍພຣະເຈົ້າອົງດຽວ, ແລ້ວມັນກໍ່ຕ້ອງຖືກຕ້ອງ ແລະ ບໍ່ມີຂໍ້ຜິດພາດ ແລະ ເຖິງແມ່ນວ່າ ມັນບໍ່ຖືກກັບແນວຄິດຂອງມະນຸດ ແຕ່ກໍບໍ່ມີໃຜສາມາດປະຕິເສດໄດ້ວ່າ ມັນບໍ່ແມ່ນພາລະກິດຂອງພຣະເຈົ້າອົງດຽວ, ຖ້າມະນຸດສາມາດເວົ້າໄດ້ຢ່າງແນ່ນອນວ່າ ມັນເປັນພາລະກິດຂອງພຣະເຈົ້າອົງດຽວ ແລ້ວແນວຄິດຂອງມະນຸດກໍ່ຈະຖືກຫຼຸດໃຫ້ກາຍເປັນເລື່ອງທີ່ບໍ່ສຳຄັນ, ບໍ່ມີຄ່າໃຫ້ກ່າວເຖິງ. ຍ້ອນນິມິດຂອງມະນຸດບໍ່ຊັດເຈນ ແລະ ເພາະມະນຸດພຽງແຕ່ຮູ້ຈັກພຣະເຢໂຮວາເປັນພຣະເຈົ້າ ແລະ ພຣະເຢຊູເປັນພຣະຜູ້ເປັນເຈົ້າ ແລະ ສອງຈິດສອງໃຈກ່ຽວກັບພຣະເຈົ້າທີ່ມາບັງເກີດເປັນມະນຸດໃນປັດຈຸບັນ, ຫຼາຍຄົນຍັງຊື່ສັດກັບພາລະກິດຂອງພຣະເຢໂຮວາ ແລະ ພຣະເຢຊູ ແລະ ອ້ອມລ້ອມໄປດ້ວຍແນວຄິດກ່ຽວກັບພາລະກິດຂອງພຣະເຈົ້າໃນປັດຈຸບັນ, ຄົນສ່ວນຫຼາຍຍັງສົງໄສຕະຫຼອດເວລາ ແລະ ບໍ່ຈິງຈັງກັບພາລະກິດໃນປັດຈຸບັນ. ມະນຸດບໍ່ມີແນວຄິດກ່ຽວກັບພາລະກິດສອງຂັ້ນຕອນກ່ອນໜ້າ ເຊິ່ງບໍ່ສາມາດເຫັນໄດ້. ນັ້ນກໍຍ້ອນມະນຸດບໍ່ເຂົ້າໃຈຄວາມເປັນຈິງຂອງພາລະກິດສອງຂັ້ນຕອນກ່ອນໜ້າ ແລະ ບໍ່ໄດ້ພົບພໍ້ມັນດ້ວຍຕົນເອງ. ມັນກໍຍ້ອນບໍ່ມີໃຜສາມາດເຫັນທັງສາມຂັ້ນຕອນໃນພາລະກິດໄດ້ ຈຶ່ງເຮັດໃຫ້ມະນຸດຈິນຕະນາການຕາມໃຈມັກ; ບໍ່ວ່າເຂົາຈະສະເໜີຫຍັງກໍຕາມ, ກໍ່ຈະບໍ່ມີຂໍ້ອ້າງອີງມາພິສູດຈິນຕະນາການດັ່ງກ່າວ ແລະ ບໍ່ມີໃຜແກ້ໄຂພວກມັນໃຫ້ຖືກຕ້ອງ. ມະນຸດຢາກເຮັດກໍໄດ້ຢ່າງມີອິດສະຫຼະຕາມອາລົມຂອງເຂົາ, ເຮັດໂດຍບໍ່ກັງວົນເຖິງຜົນຕາມມາ ແລະ ປ່ອຍໃຫ້ຈິນຕະນາການຂອງເຂົາເປັນອິດສະຫຼະ; ບໍ່ມີຂໍ້ອ້າງອີງມາພິສູດຈິນຕະນາການຂອງເຂົາ ແລະ ດ້ວຍເຫດນັ້ນ ຈິນຕະນາການຂອງມະນຸດກໍກາຍມາເປັນ "ຄວາມຈິງ" ໂດຍບໍ່ສົນວ່າ ຈະມີຫຼັກຖານມາພິສູດ ຫຼື ບໍ. ສະນັ້ນ, ມະນຸດເຊື່ອໃນພຣະເຈົ້າທີ່ເຂົາຈິນຕະນາການຂຶ້ນມາໃນຄວາມຄິດຂອງຕົນເອງ ແລະ ບໍ່ສະແຫວງຫາພຣະເຈົ້າແຫ່ງຄວາມເປັນຈິງ. ຖ້າຄົນໜຶ່ງຄົນໃດມີຄວາມເຊື່ອແບບດຽວ ແລ້ວທ່າມກາງຄົນຮ້ອຍຄົນກໍຈະມີຮ້ອຍຄວາມເຊື່ອ. ມະນຸດຖືກຄອບງຳໂດຍຄວາມເຊື່ອດັ່ງກ່າວ ເພາະວ່າ ເຂົາບໍ່ໄດ້ເຫັນຄວາມເປັນຈິງຂອງພາລະກິດຂອງພຣະເຈົ້າ ເພາະເຂົາພຽງແຕ່ໄດ້ຍິນມັນດ້ວຍຫູຂອງເຂົາເອງ ແລະ ບໍ່ໄດ້ເຫັນມັນດ້ວຍຕາຂອງເຂົາ. ມະນຸດໄດ້ຍິນກ່ຽວກັບຕຳນານ ແລະ ເລື່ອງລາວ, ແຕ່ເຂົາບໍ່ຄ່ອຍໄດ້ຍິນເຖິງຄວາມຮູ້ຂອງຄວາມຈິງແຫ່ງພາລະກິດຂອງພຣະເຈົ້າ. ສະນັ້ນ, ມັນຄືຄົນເຫຼົ່ານັ້ນທີ່ຫາກໍມາເປັນຜູ້ເຊື່ອໄດ້ພຽງໜຶ່ງປີທີ່ມາເຊື່ອໃນພຣະເຈົ້າ ແລະ ຜ່ານແນວຄິດຂອງພວກເຂົາເອງ. ເລື່ອງດັ່ງກ່າວກໍ່ຍັງເປັນຄວາມຈິງສຳລັບຄົນເຫຼົ່ານັ້ນທີ່ເຊື່ອໃນພຣະເຈົ້າຕະຫຼອດຊີວິດຂອງພວກເຂົາ. ຄົນເຫຼົ່ານັ້ນທີ່ບໍ່ສາມາດເຫັນຄວາມຈິງຈະບໍ່ສາມາດໜີຈາກຄວາມເຊື່ອທີ່ພວກເຂົາມີແນວຄິດກ່ຽວກັບພຣະເຈົ້າໄດ້ຈັກເທື່ອ. ມະນຸດເຊື່ອວ່າ ເຂົາໄດ້ປົດປ່ອຍໃຫ້ຕົນເອງເປັນອິດສະຫຼະຈາກການຜູກມັດຂອງແນວຄິດເກົ່າແກ່ຂອງເຂົາ ແລະ ໄດ້ເຂົ້າສູ່ແຜ່ນດິນໃໝ່ແລ້ວ. ມະນຸດບໍ່ຮູ້ບໍວ່າ ຄວາມຮູ້ຂອງຄົນເຫຼົ່ານັ້ນທີ່ບໍ່ສາມາດເຫັນໃບໜ້າທີ່ແທ້ຈິງຂອງພຣະເຈົ້າບໍ່ມີຫຍັງເລີຍນອກຈາກແນວຄິດ ແລະ ເລື່ອງທີ່ໄດ້ຍິນມາ? ມະນຸດຄິດວ່າ ແນວຄິດຂອງເຂົາຖືກຕ້ອງ ແລະ ບໍ່ມີຂໍ້ຜິດພາດ ແລະ ເຂົາຄິດວ່າ ແນວຄິດເຫຼົ່ານີ້ມາຈາກພຣະເຈົ້າ. ໃນປັດຈຸບັນ ເມື່ອມະນຸດໄດ້ພົບພໍ້

ພາລະກິດຂອງພຣະເຈົ້າ ເຂົາກໍຈະມາຍແນວຄິດທີ່ກໍ່ຕົວຂຶ້ນໃນຊ່ວງເວລາຫຼາຍປີ. ຈິນຕະນາການ ແລະ ຄວາມຄິດໃນອະດີດໄດ້ກາຍມາເປັນອຸປະສັກໃຫ້ກັບພາລະກິດໃນຂັ້ນຕອນນີ້ ແລະ ກາຍມາເປັນຄວາມຫຍຸ້ງຍາກທີ່ຈະໃຫ້ມະນຸດປະຖິ້ມແນວຄິດດັ່ງກ່າວ ແລະ ໂຕ້ແຍ້ງຄວາມຄິດດັ່ງກ່າວ. ແນວຄິດກ່ຽວກັບພາລະກິດທີ່ເປັນໄປຕາມແຕ່ລະຂັ້ນຕອນຂອງຫຼາຍຄົນເຫຼົ່ານັ້ນທີ່ຕິດຕາມພຣະເຈົ້າຈົນຮອດປັດຈຸບັນໄດ້ກາຍມາເປັນສິ່ງທີ່ຮ້າຍແຮງຂຶ້ນ ແລະ ຄົນເຫຼົ່ານີ້ໄດ້ສ້າງຄວາມເປັນສັດຕູທີ່ດື້ດຶງເທື່ອລະໜ້ອຍກັບພຣະເຈົ້າທີ່ມາບັງເກີດເປັນມະນຸດ. ແຫຼ່ງກຳເນີດຂອງຄວາມກຽດຊັງນີ້ແມ່ນແນວຄິດ ແລະ ຈິນຕະນາການຂອງມະນຸດ. ແນວຄິດ ແລະ ຈິນຕະນາການຂອງມະນຸດໄດ້ກາຍມາເປັນສັດຕູຂອງພາລະກິດໃນປັດຈຸບັນ, ພາລະກິດທີ່ບໍ່ສອດຄ່ອງກັບແນວຄິດຂອງມະນຸດ. ສິ່ງເກີດຂຶ້ນກໍ່ເພາະຄວາມຈິງບໍ່ອະນຸຍາດໃຫ້ມະນຸດຈິນຕະນາການຢ່າງມີອິດສະຫຼະ ແລະ ຍິ່ງໄປກວ່ານັ້ນ ມະນຸດບໍ່ສາມາດປະຕິເສດໄດ້ຢ່າງງ່າຍດາຍ ແລະ ແນວຄິດ ແລະ ຈິນຕະນາການຂອງມະນຸດບໍ່ຍອມທົນຕໍ່ການມີຢູ່ຂອງຄວາມຈິງ ແລະ ຍິ່ງໄປກວ່ານັ້ນ ຍ້ອນມະນຸດບໍ່ມອບຄວາມຄິດໃຫ້ກັບຄວາມຖືກຕ້ອງ ແລະ ຄວາມແທ້ຈິງຂອງຄວາມຈິງ ແລະ ພຽງແຕ່ມາຍແນວຄິດຂອງເຂົາຢ່າງໃຈດຽວເທົ່ານັ້ນ ແລະ ນຳໃຊ້ຈິນຕະນາການຂອງເຂົາເອງ. ສິ່ງນີ້ສາມາດເວົ້າໄດ້ວ່າ ເປັນຄວາມຜິດພາດຂອງແນວຄິດຂອງມະນຸດ ແລະ ບໍ່ສາມາດເວົ້າໄດ້ວ່າ ເປັນຄວາມຜິດພາດຂອງພາລະກິດຂອງພຣະເຈົ້າ. ມະນຸດອາດຈິນຕະນາການຕາມທີ່ເຂົາຕ້ອງການ ແຕ່ເຂົາອາດຈະບໍ່ໂຕ້ຖຽງຂັ້ນຕອນໃດໜຶ່ງຂອງພາລະກິດຂອງພຣະເຈົ້າ ຫຼື ສ່ວນໃດສ່ວນໜຶ່ງຢ່າງມີອິດສະຫຼະ; ຄວາມຈິງຂອງພາລະກິດຂອງພຣະເຈົ້າແມ່ນບໍ່ສາມາດລະເມີດໂດຍມະນຸດໄດ້. ເຈົ້າອາດມີອິດສະຫຼະໃນຈິນຕະນາການຂອງເຈົ້າ ແລະ ຍິ່ງໄປກວ່ານັ້ນ ອາດຮວບຮວມເລື່ອງລາວທີ່ດີງາມກ່ຽວກັບພາລະກິດຂອງພຣະເຢໂຮວາ ແລະ ພຣະເຢຊູ ແຕ່ເຈົ້າອາດບໍ່ປະຕິເສດຄວາມຈິງຂອງແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຢໂຮວາ ແລະ ພຣະເຢຊູ; ນີ້ຄືຫຼັກການ ແລະ ມັນຍັງເປັນພຣະບັນຍັດສຳລັບຄຸ້ມຄອງ ແລະ ພວກເຈົ້າຄວນເຂົ້າໃຈເຖິງຄວາມສຳຄັນຂອງບັນຫາເຫຼົ່ານີ້. ມະນຸດເຊື່ອວ່າ ຂັ້ນຕອນນີ້ຂອງພາລະກິດບໍ່ເຂົ້າກັບແນວຄິດຂອງມະນຸດ ແລະ ນີ້ບໍ່ແມ່ນບັນຫາສຳລັບພາລະກິດສອງຂັ້ນຕອນທີ່ຜ່ານມາ. ໃນຈິນຕະນາການຂອງເຂົາ, ມະນຸດເຊື່ອວ່າ ພາລະກິດຂອງສອງຂັ້ນຕອນທີ່ຜ່ານມາບໍ່ຄືກັບພາລະກິດໃນປັດຈຸບັນຢ່າງແນ່ນອນ, ແຕ່ເຈົ້າເຄີຍພິຈາລະນາບໍວ່າຫຼັກການຂອງພາລະກິດຂອງພຣະເຈົ້າຄືກັນທັງໝົດ, ພາລະກິດຂອງພຣະອົງເປັນຈິງຢູ່ສະເໝີ ແລະ ບໍ່ວ່າຈະເປັນຍຸກໃດກໍຈະມີຄົນຈຳນວນຫຼວງຫຼາຍທີ່ຂັດຂືນ ແລະ ຕໍ່ຕ້ານຄວາມຈິງຂອງພາລະກິດຂອງພຣະອົງ? ໃນປັດຈຸບັນ ທຸກຄົນເຫຼົ່ານັ້ນທີ່ຂັດຂືນ ແລະ ຕໍ່ຕ້ານຂັ້ນຕອນນີ້ຂອງພາລະກິດຍັງໄດ້ຕໍ່ຕ້ານພຣະເຈົ້າໃນເວລາອະດີດຢ່າງບໍ່ຕ້ອງສົງໄສ ຍ້ອນຄົນປະເພດນີ້ຈະເປັນສັດຕູຂອງພຣະເຈົ້າຢູ່ສະເໝີ. ຄົນທີ່ຮູ້ຈັກຄວາມຈິງຂອງພາລະກິດຂອງພຣະເຈົ້າຈະເຫັນພາລະກິດສາມຂັ້ນຕອນເປັນພາລະກິດຂອງພຣະເຈົ້າອົງດຽວ ແລະ ຈະປະຖິ້ມແນວຄິດຂອງພວກເຂົາ. ຄົນເຫຼົ່ານີ້ແມ່ນຄົນທີ່ຮູ້ຈັກພຣະເຈົ້າ ແລະ ຄົນປະເພດນີ້ກໍແມ່ນຄົນເຫຼົ່ານັ້ນທີ່ຕິດຕາມພຣະເຈົ້າຢ່າງແທ້ຈິງ. ເມື່ອການຄຸ້ມຄອງຂອງພຣະເຈົ້າທັງໝົດໃກ້ເຖິງຈຸດສິ້ນສຸດ, ພຣະເຈົ້າຈະຈັດແບ່ງສິ່ງທັງໝົດຕາມແຕ່ລະປະເພດ. ມະນຸດຖືກສ້າງໂດຍມື

ຂອງພຣະຜູ້ສ້າງ ແລະ ໃນທີ່ສຸດ ພຣະອົງຕ້ອງນຳມະນຸດກັບມາຄືນສູ່ອຳນາດຂອງພຣະອົງຢ່າງສົມບູນ; ນີ້ຄືການສິ້ນສຸດຂອງພາລະກິດສາມຂັ້ນຕອນ. ຂັ້ນຕອນຂອງພາລະກິດຂອງຍຸກສຸດທ້າຍ ແລະ ສອງຂັ້ນຕອນກ່ອນໜ້າໃນປະເທດອິດສະຣາເອນ ແລະ ຢູເດຍແມ່ນແຜນການຄຸ້ມຄອງຂອງພຣະເຈົ້າໃນຈັກກະວານທັງໝົດ. ບໍ່ມີໃຜສາມາດປະຕິເສດສິ່ງນີ້ໄດ້ ແລະ ມັນເປັນຄວາມຈິງຂອງພາລະກິດຂອງພຣະເຈົ້າ. ເຖິງແມ່ນວ່າ ມະນຸດຍັງບໍ່ໄດ້ປະເຊີນ ຫຼື ພົບພໍ້ຫຼາຍສິ່ງຫຼາຍຢ່າງຂອງພາລະກິດນີ້, ຄວາມຈິງກໍຍັງເປັນຄວາມຈິງ ແລະ ມະນຸດຄົນໃດບໍ່ສາມາດປະຕິເສດສິ່ງນີ້ໄດ້. ຄົນທີ່ເຊື່ອໃນພຣະເຈົ້າໃນທຸກດິນແດນແຫ່ງຈັກກະວານຈະຍອມຮັບພາລະກິດສາມຂັ້ນຕອນທັງໝົດ. ຖ້າເຈົ້າພຽງແຕ່ຮູ້ຈັກຂັ້ນຕອນໃດໜຶ່ງຂອງພາລະກິດ ແລະ ບໍ່ເຂົ້າໃຈອີກສອງຂັ້ນຕອນຂອງພາລະກິດ, ບໍ່ເຂົ້າໃຈພາລະກິດຂອງພຣະເຈົ້າໃນອະດີດ ເຈົ້າກໍຈະບໍ່ສາມາດກ່າວຄວາມຈິງທັງໝົດຂອງແຜນການຄຸ້ມຄອງທັງໝົດຂອງພຣະເຈົ້າໄດ້ ແລະ ຄວາມຮູ້ທີ່ເຈົ້າມີກ່ຽວກັບພຣະເຈົ້າກໍມີແຕ່ດ້ານດຽວ ຍ້ອນໃນຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້ານັ້ນເຈົ້າບໍ່ໄດ້ຮູ້ຈັກ ຫຼື ບໍ່ເຂົ້າໃຈພຣະອົງ ແລະ ດ້ວຍເຫດນັ້ນ ເຈົ້າບໍ່ເໝາະສົມທີ່ຈະເປັນພະຍານໃຫ້ກັບພຣະເຈົ້າ. ບໍ່ວ່າຄວາມຮູ້ໃນປັດຈຸບັນຂອງເຈົ້າກ່ຽວກັບສິ່ງເຫຼົ່ານີ້ຈະເລິກເຊິ່ງ ຫຼື ບໍ່ສຳຄັນ, ໃນທີ່ສຸດພວກເຈົ້າຕ້ອງມີຄວາມຮູ້ ແລະ ຕ້ອງໝັ້ນໃຈຢ່າງຮອບຄອບ ແລະ ທຸກຄົນຈະເຫັນຄວາມສົມບູນຂອງພາລະກິດຂອງພຣະເຈົ້າ ແລະ ຍອມຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ. ໃນຕອນສຸດທ້າຍຂອງພາລະກິດນີ້, ທຸກສາສະໜາຈະກາຍເປັນໜຶ່ງດຽວ, ທຸກສິ່ງທີ່ຖືກສ້າງຈະກັບຄືນສູ່ອຳນາດຂອງພຣະຜູ້ສ້າງ, ທຸກສິ່ງທີ່ຖືກສ້າງຈະນະມັດສະການພຣະເຈົ້າທີ່ແທ້ຈິງພຽງອົງດຽວ ແລະ ສາສະໜາທີ່ຊົ່ວຮ້າຍທັງໝົດຈະຫາຍໄປ ໂດຍທີ່ຈະບໍ່ປະກົດຂຶ້ນອີກຈັກເທື່ອ.

ເປັນຫຍັງຕ້ອງອ້າງເຖິງພາລະກິດສາມຂັ້ນຕອນຢ່າງຕໍ່ເນື່ອງ? ການຜ່ານໄປຂອງຍຸກ, ການພັດທະນາຂອງສັງຄົມ ແລະ ເບື້ອງໜ້າທັງໝົດທີ່ປ່ຽນໄປຂອງທຳມະຊາດລ້ວນແລ້ວແຕ່ສືບເນື່ອງຈາກການປ່ຽນແປງໃນພາລະກິດສາມຂັ້ນຕອນ. ມະນຸດຊາດປ່ຽນແປງໄປພ້ອມກັບພາລະກິດຂອງພຣະເຈົ້າ ແລະ ບໍ່ພັດທະນາດ້ວຍຕົວມັນເອງ. ພາລະກິດສາມຂັ້ນຕອນຂອງພຣະເຈົ້າແມ່ນຖືກກ່າວເຖິງເພື່ອນຳສິ່ງທີ່ມີຊີວິດທຸກຢ່າງ ແລະ ທຸກຄົນໃນທຸກສາສະໜາ ແລະ ນິກາຍໃຫ້ມາຢູ່ພາຍໃຕ້ອຳນາດຂອງພຣະເຈົ້າອົງດຽວ. ບໍ່ວ່າເຈົ້າຈະນັບຖືສາດສະໜາໃດກໍຕາມໃນທີ່ສຸດ, ພວກເຈົ້າທັງໝົດກໍຈະຍອມຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ. ມີພຽງແຕ່ພຣະເຈົ້າພຣະອົງເອງທີ່ສາມາດປະຕິບັດພາລະກິດນີ້ໄດ້; ຫົວໜ້າທາງສາສະໜາໃດໜຶ່ງບໍ່ສາມາດປະຕິບັດໄດ້. ມີຫຼາຍສາສະໜາຫຼັກໆໃນໂລກ ແລະ ແຕ່ລະສາສະໜາກໍມີຫົວໜ້າ ຫຼື ຜູ້ນຳ ແລະ ຜູ້ຕິດຕາມແຜ່ກະຈາຍໄປທົ່ວທຸກປະເທດທີ່ແຕກຕ່າງກັນ ແລະ ອານາເຂດທົ່ວແຜ່ນດິນໂລກ; ເກືອບທຸກປະເທດ ບໍ່ວ່າຈະໃຫຍ່ ຫຼື ນ້ອຍ ແມ່ນມີສາສະໜາທີ່ແຕກຕ່າງກັນ. ເຖິງຢ່າງໃດກໍຕາມ, ບໍ່ວ່າຈະມີສາສະໜາຫຼາຍສໍ່າໃດທົ່ວເທິງໂລກນີ້, ໃນທີ່ສຸດ ທຸກຄົນທີ່ຢູ່ໃນຈັກກະວານກໍຢູ່ພາຍໃຕ້ການນຳພາຂອງພຣະເຈົ້າອົງດຽວ ແລະ ການເປັນຢູ່ຂອງພວກເຂົາກໍບໍ່ໄດ້ຖືກນຳພາໂດຍຫົວໜ້າ ຫຼື ຜູ້ນຳທາງສາສະໜາ. ນີ້ເວົ້າໄດ້ວ່າ ມະນຸດຊາດບໍ່ໄດ້ຖືກນຳພາໂດຍຫົວໜ້າ ຫຼື ຜູ້ນຳທາງສາສະໜາໃດໜຶ່ງ; ກົງກັນຂ້າມ, ບັນດາມວນມະນຸດຊາດຖືກນຳພາໂດຍພຣະຜູ້ສ້າງ ເຊິ່ງເປັນ

ຜູ້ສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງ ແລະ ຍັງສ້າງມະນຸດຊາດ, ນີ້ກໍ່ຄືຄວາມຈິງ. ເຖິງແມ່ນວ່າ ໂລກມີຫຼາຍສາສະໜາໃຫຍ່ໆທີ່ຫຼາກຫຼາຍກັນ ບໍ່ວ່າພວກມັນຈະຍິ່ງໃຫຍ່ສໍ່າໃດ ແຕ່ພວກມັນທັງໝົດກໍຢູ່ພາຍໃຕ້ອຳນາດຂອງພຣະຜູ້ສ້າງ ແລະ ພວກເຂົາບໍ່ມີໃຜເລີຍທີ່ສາມາດຢູ່ເໜືອຂອບເຂດອຳນາດນີ້ໄດ້. ການພັດທະນາຂອງມະນຸດຊາດ, ຄວາມກ້າວໜ້າຢ່າງເໜືອຊັ້ນຂອງສັງຄົມ, ການພັດທະນາຂອງວິທະຍາສາດທຳມະຊາດ, ແຕ່ລະຢ່າງບໍ່ສາມາດແຍກໄດ້ຈາກການຈັດກຽມຂອງພຣະຜູ້ສ້າງ ແລະ ພາລະກິດນີ້ບໍ່ແມ່ນສິ່ງທີ່ຫົວໜ້າທາງສາສະໜາໃດໜຶ່ງທີ່ຖືກແຕ່ງຕັ້ງຈະສາມາດປະຕິບັດໄດ້. ຫົວໜ້າທາງສາສະໜາເປັນພຽງຜູ້ນຳໃນສາສະໜາໃດໜຶ່ງ ແລະ ບໍ່ສາມາດເປັນຕົວແທນໃຫ້ກັບພຣະເຈົ້າ ຫຼື ພວກເຂົາບໍ່ສາມາດເປັນຕົວແທນໃຫ້ຜູ້ທີ່ສ້າງສະຫວັນ ແລະ ແຜ່ນດິນໂລກ ແລະ ທຸກສິ່ງທຸກຢ່າງ. ຫົວໜ້າທາງສາສະໜາສາມາດນຳຄົນເຫຼົ່ານັ້ນທັງໝົດທີ່ຢູ່ພາຍໃນສາສະໜາທັງໝົດ ແຕ່ພວກເຂົາບໍ່ສາມາດສັ່ງສິ່ງທີ່ມີຊີວິດທັງໝົດທີ່ຢູ່ພາຍໃຕ້ສະຫວັນ, ນີ້ຄືຄວາມຈິງທີ່ເປັນທີ່ຍອມຮັບທົ່ວໆໄປ. ຫົວໜ້າທາງສາສະໜາເປັນພຽງຜູ້ນຳ ແລະ ບໍ່ສາມາດຢືນໄດ້ຢ່າງເທົ່າທຽມກັບພຣະເຈົ້າ (ພຣະຜູ້ສ້າງ). ສິ່ງທັງໝົດຢູ່ໃນມືຂອງພຣະຜູ້ສ້າງ ແລະ ໃນທີ່ສຸດ ພວກເຂົາທັງໝົດຈະກັບຄືນສູ່ມືຂອງພຣະຜູ້ສ້າງ. ມະນຸດຊາດຖືກສ້າງໂດຍພຣະເຈົ້າ ແລະ ບໍ່ວ່າຈະເປັນສາສະໜາໃດກໍຕາມ, ທຸກໆຄົນຈະກັບຄືນໄປຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ, ນີ້ຄືສິ່ງທີ່ຫຼີກຫຼ່ຽງບໍ່ໄດ້. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ເປັນພຣະເຈົ້າທີ່ສູງສຸດທ່າມກາງທຸກສິ່ງຢ່າງ ແລະ ຜູ້ປົກຄອງທີ່ສູງສຸດທ່າມກາງສິ່ງທີ່ມີຊີວິດຍັງຕ້ອງໄດ້ກັບຄືນໄປສູ່ອຳນາດຂອງພຣະອົງ. ບໍ່ວ່າມະນຸດຢູ່ໃນສະຖານະສູງສໍ່າໃດ, ມະນຸດຄົນນັ້ນບໍ່ສາມາດນຳມະນຸດຊາດໃຫ້ໄປສູ່ຈຸດໝາຍທີ່ເໝາະສົມໄດ້ ແລະ ບໍ່ມີໃຜສາມາດຈັດແບ່ງສິ່ງທັງໝົດອອກເປັນແຕ່ລະປະເພດໄດ້. ພຣະເຢໂຮວາ ພຣະອົງເອງໄດ້ສ້າງມະນຸດຊາດ ແລະ ຈັດແບ່ງແຕ່ລະຢ່າງອອກເປັນແຕ່ລະປະເພດ ແລະ ເມື່ອເວລາສຸດທ້າຍມາເຖິງ ພຣະອົງຍັງຈະປະຕິບັດພາລະກິດຂອງພຣະອົງເອງດ້ວຍຕົນເອງ ຄືການຈັດແບ່ງສິ່ງທັງໝົດອອກເປັນແຕ່ລະປະເພດ, ບໍ່ມີໃຜສາມາດປະຕິບັດສິ່ງນີ້ໄດ້ຍົກເວັ້ນພຣະເຈົ້າ. ພາລະກິດສາມຂັ້ນຕອນທີ່ປະຕິບັດຕັ້ງແຕ່ເລີ່ມຕົ້ນຈົນຮອດປັດຈຸບັນແມ່ນຖືກປະຕິບັດໂດຍພຣະເຈົ້າພຣະອົງເອງ ແລະ ຖືກປະຕິບັດໂດຍພຣະເຈົ້າອົງດຽວ. ຄວາມຈິງຂອງພາລະກິດສາມຂັ້ນຕອນນີ້ແມ່ນຄວາມຈິງຂອງຄວາມເປັນຜູ້ນຳບັນດາມວນມະນຸດຂອງພຣະເຈົ້າ ເຊິ່ງເປັນຄວາມຈິງທີ່ບໍ່ມີໃຜສາມາດປະຕິເສດໄດ້. ໃນຕອນສຸດທ້າຍຂອງພາລະກິດສາມຂັ້ນຕອນ, ທຸກສິ່ງຢ່າງຈະຖືກຈັດແບ່ງອອກເປັນແຕ່ລະປະເພດ ແລະ ກັບຄືນສູ່ອຳນາດຂອງພຣະເຈົ້າ ຍ້ອນວ່າ ທົ່ວທັງຈັກກະວານທັງໝົດ ມີພຽງພຣະເຈົ້າອົງນີ້ອົງດຽວ ແລະ ບໍ່ມີສາສະໜາອື່ນໆອີກເລີຍ. ຄົນນັ້ນທີ່ບໍ່ສາມາດສ້າງແຜ່ນດິນໂລກຈະບໍ່ສາມາດນຳຈຸດສິ້ນສຸດມາເຖິງມັນໄດ້ ໃນຂະນະທີ່ພຣະອົງຜູ້ສ້າງແຜ່ນດິນໂລກຈະສາມາດນຳຈຸດສິ້ນສຸດມາເຖິງຢ່າງແນ່ນອນ. ດ້ວຍເຫດນັ້ນ ຖ້າຄົນໃດໜຶ່ງບໍ່ສາມາດນຳຈຸດສິ້ນສຸດມາເຖິງຍຸກ ແລະ ພຽງແຕ່ສາມາດຊ່ວຍມະນຸດໃຫ້ຝຶກຝົນຄວາມຄິດຂອງເຂົາ ແລ້ວເຂົາກໍບໍ່ແມ່ນພຣະເຈົ້າຢ່າງແນ່ນອນ ແລະ ຈະບໍ່ແມ່ນພຣະຜູ້ເປັນເຈົ້າຂອງມະນຸດຊາດຢ່າງແນ່ນອນ. ຄົນນັ້ນຈະບໍ່ສາມາດປະຕິບັດພາລະກິດທີ່ຍິ່ງໃຫຍ່ດັ່ງກ່າວໄດ້; ມີພຽງຄົນດຽວທີ່ສາມາດປະຕິບັດພາລະກິດດັ່ງກ່າວ ແລະ ທຸກຄົນທີ່ບໍ່ສາມາດປະຕິບັດ

ພາລະກິດນີ້ໄດ້ກໍເປັນສັດຕູຢ່າງແນ່ນອນ ແລະ ບໍ່ແມ່ນພຣະເຈົ້າ. ສາສະໜາທີ່ຊົ່ວຮ້າຍທັງໝົດບໍ່ເຂົ້າກັບພຣະເຈົ້າ ແລະ ເມື່ອພວກມັນບໍ່ເຂົ້າກັບພຣະເຈົ້າ ພວກມັນກໍຈະກາຍເປັນສັດຕູຂອງພຣະເຈົ້າ. ມີພຽງແຕ່ພຣະເຈົ້າທີ່ແທ້ຈິງພຣະອົງດຽວທີ່ສາມາດປະຕິບັດພາລະກິດທັງໝົດໄດ້ ແລະ ຈັກກະວານທັງໝົດແມ່ນຖືກບັນຊາໂດຍພຣະເຈົ້າພຣະອົງດຽວນີ້. ບໍ່ວ່າມັນຈະເປັນການທີ່ພຣະອົງປະຕິບັດພາລະກິດໃນປະເທດອິດສະຣາເອນ ຫຼື ໃນປະເທດຈີນ, ບໍ່ວ່າ ພາລະກິດຖືກປະຕິບັດໂດຍພຣະວິນຍານ ຫຼື ໂດຍເນື້ອໜັງ, ພຣະເຈົ້າກໍປະຕິບັດພາລະກິດທັງໝົດດ້ວຍຕົວພຣະອົງເອງ ແລະ ບໍ່ມີໃຜສາມາດປະຕິບັດໄດ້. ແນ່ນອນຢູ່ແລ້ວທີ່ມັນເປັນຍ້ອນວ່າ ພຣະອົງເປັນພຣະເຈົ້າຂອງບັນດາມວນມະນຸດທີ່ພຣະເຈົ້າປະຕິບັດພາລະກິດຢ່າງມີອິດສະຫຼະ ໂດຍບໍ່ມີສະພາບໃດໆມາບັງຄັບ, ນີ້ເປັນສິ່ງທີ່ຍິ່ງໃຫຍ່ທີ່ສຸດຂອງນິມິດທັງໝົດ. ໃນຖານະທີ່ເປັນສິ່ງທີ່ມີຊີວິດຂອງພຣະເຈົ້າ, ຖ້າເຈົ້າຕ້ອງການປະຕິບັດໜ້າທີ່ຂອງສິ່ງທີ່ມີຊີວິດຂອງພຣະເຈົ້າ ແລະ ເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ເຈົ້າຕ້ອງເຂົ້າໃຈພາລະກິດຂອງພຣະເຈົ້າ, ເຈົ້າຕ້ອງເຂົ້າໃຈຄວາມປະສົງຂອງພຣະເຈົ້າສຳລັບສິ່ງທີ່ມີຊີວິດທັງໝົດ, ເຈົ້າຕ້ອງເຂົ້າໃຈແຜນການຄຸ້ມຄອງຂອງພຣະອົງ ແລະ ເຈົ້າຕ້ອງເຂົ້າໃຈຄວາມສຳຄັນທັງໝົດຂອງພາລະກິດທີ່ພຣະອົງປະຕິບັດ. ຄົນເຫຼົ່ານັ້ນທີ່ບໍ່ເຂົ້າໃຈສິ່ງນີ້ບໍ່ມີຄຸນສົມບັດໃນການເປັນສິ່ງຖືກສ້າງຂອງພຣະເຈົ້າ! ໃນຖານະທີ່ເປັນສິ່ງທີ່ມີຊີວິດຂອງພຣະເຈົ້າ, ຖ້າເຈົ້າບໍ່ເຂົ້າໃຈວ່າ ເຈົ້າມາຈາກໃສ, ບໍ່ເຂົ້າໃຈປະຫວັດສາດຂອງມະນຸດຊາດ ແລະ ພາລະກິດທັງໝົດທີ່ພຣະເຈົ້າປະຕິບັດ ແລະ ຍິ່ງໄປກວ່ານັ້ນ ບໍ່ເຂົ້າໃຈວ່າ ມະນຸດຊາດພັດທະນາມາຮອດປັດຈຸບັນໄດ້ແນວໃດ ແລະ ບໍ່ເຂົ້າໃຈວ່າ ໃຜສັ່ງມະນຸດຊາດທັງໝົດ, ເຈົ້າກໍຈະບໍ່ສາມາດປະຕິບັດໜ້າທີ່ຂອງເຈົ້າໄດ້. ພຣະເຈົ້ານຳມະນຸດຊາດມາຈົນຮອດປັດຈຸບັນ ແລະ ຕັ້ງແຕ່ທີ່ພຣະອົງສ້າງມະນຸດຢູ່ເທິງແຜ່ນດິນໂລກ ພຣະອົງກໍບໍ່ເຄີຍປະຖິ້ມເຂົາຈັກເທື່ອ. ພຣະວິນຍານບໍລິສຸດບໍ່ເຄີຍຢຸດປະຕິບັດພາລະກິດຈັກເທື່ອ, ບໍ່ເຄີຍຢຸດໃນການນຳພາມະນຸດຊາດ ແລະ ບໍ່ເຄີຍປະຖິ້ມມະນຸດຊາດ. ແຕ່ມະນຸດຊາດບໍ່ສຳນຶກວ່າ ມີພຣະເຈົ້າ, ແຮງໄກທີ່ເຂົາຈະຮູ້ຈັກພຣະອົງ. ມີຫຍັງອີກທີ່ເປັນຕາອັບອາຍກວ່າສິ່ງນີ້ສຳລັບສິ່ງທີ່ມີຊີວິດທັງໝົດຂອງພຣະເຈົ້າ? ພຣະເຈົ້ານຳພາມະນຸດເປັນການສ່ວນຕົວ ແຕ່ມະນຸດບໍ່ເຂົ້າໃຈພາລະກິດຂອງພຣະເຈົ້າ. ເຈົ້າເປັນສິ່ງທີ່ມີຊີວິດຂອງພຣະເຈົ້າ ແຕ່ເຈົ້າບໍ່ເຂົ້າໃຈປະຫວັດສາດຂອງເຈົ້າເອງ ແລະ ບໍ່ຮັບຮູ້ວ່າ ໃຜນຳພາເຈົ້າໃນການເດີນທາງຂອງເຈົ້າ, ເຈົ້າບໍ່ຮູ້ພາລະກິດທີ່ພຣະເຈົ້າປະຕິບັດ ແລະ ດ້ວຍເຫດນັ້ນ ເຈົ້າບໍ່ສາມາດຮູ້ຈັກພຣະເຈົ້າ. ຖ້າເຈົ້າຍັງບໍ່ຮູ້ຈັກໃນຕອນນີ້ແລ້ວເຈົ້າຈະບໍ່ມີຄຸນສົມບັດໃນການເປັນພະຍານໃຫ້ກັບພຣະເຈົ້າຈັກເທື່ອ. ໃນປັດຈຸບັນ ພຣະຜູ້ສ້າງແມ່ນນຳພາມະນຸດທຸກຄົນເປັນການສ່ວນຕົວອີກຄັ້ງ ແລະ ເຮັດໃຫ້ມະນຸດທຸກຄົນເຫັນສະຕິປັນຍາ, ຄວາມຍິ່ງໃຫຍ່, ຄວາມລອດພົ້ນ ແລະ ຄວາມອັດສະຈັນຂອງພຣະອົງ. ແຕ່ເຈົ້າຍັງບໍ່ສຳນຶກ ຫຼື ເຂົ້າໃຈ ແລະ ສະນັ້ນ ເຈົ້າບໍ່ແມ່ນຄົນທີ່ຈະຮັບຄວາມລອດພົ້ນບໍ? ຄົນເຫຼົ່ານັ້ນທີ່ເປັນຂອງຊາຕານບໍ່ເຂົ້າໃຈພຣະທຳຂອງພຣະເຈົ້າ ໃນຂະນະທີ່ຄົນເຫຼົ່ານັ້ນທີ່ເປັນຂອງພຣະເຈົ້າສາມາດໄດ້ຍິນສຽງຂອງພຣະເຈົ້າ. ທຸກຄົນເຫຼົ່ານັ້ນທີ່ສຳນຶກ ແລະ ເຂົ້າໃຈພຣະທຳທີ່ເຮົາກ່າວແມ່ນຄົນທີ່ຈະໄດ້ຮັບຄວາມລອດພົ້ນ ແລະ ຄົນທີ່ຈະເປັນພະຍານໃຫ້ກັບພຣະເຈົ້າ; ທຸກຄົນເຫຼົ່ານັ້ນທີ່ບໍ່ເຂົ້າໃຈພຣະທຳທີ່ເຮົາກ່າວບໍ່ສາມາດເປັນ

ພະຍານໃຫ້ພຣະເຈົ້າ ແລະ ເປັນຄົນທີ່ຕ້ອງຖືກໂຍນອອກ. ຄົນເຫຼົ່ານັ້ນທີ່ບໍ່ເຂົ້າໃຈເຖິງຄວາມປະສົງຂອງພຣະເຈົ້າ ແລະ ບໍ່ສຳນຶກພາລະກິດຂອງພຣະເຈົ້າບໍ່ສາມາດຮັບຄວາມຮູ້ຂອງພຣະເຈົ້າ ແລະ ຄົນປະເພດດັ່ງກ່າວຈະບໍ່ສາມາດເປັນພະຍານໃຫ້ກັບພຣະເຈົ້າ. ຖ້າເຈົ້າຕ້ອງການເປັນພະຍານໃຫ້ກັບພຣະເຈົ້າແລ້ວເຈົ້າກໍ່ຕ້ອງຮູ້ຈັກພຣະເຈົ້າ; ຄວາມຮູ້ຂອງພຣະເຈົ້າແມ່ນຖືກເຮັດໃຫ້ສົມບູນໂດຍຜ່ານທາງພາລະກິດຂອງພຣະເຈົ້າ. ໂດຍລວມແລ້ວ, ຖ້າເຈົ້າຕ້ອງການຮູ້ຈັກພຣະເຈົ້າ ເຈົ້າກໍຕ້ອງຮູ້ຈັກພາລະກິດຂອງພຣະເຈົ້າ: ການຮູ້ຈັກພາລະກິດຂອງພຣະເຈົ້າແມ່ນສິ່ງທີ່ສຳຄັນທີ່ສຸດ. ເມື່ອເວລາສາມຂັ້ນຕອນຂອງພາລະກິດສິ້ນສຸດລົງກໍຈະມີກຸ່ມຜູ້ທີ່ເປັນພະຍານຕໍ່ພຣະເຈົ້າ ແລະ ກຸ່ມຜູ້ທີ່ຮູ້ຈັກພຣະເຈົ້າ. ຜູ້ຄົນເຫຼົ່ານີ້ທັງໝົດຈະຮູ້ຈັກພຣະເຈົ້າ ແລະ ຈະສາມາດນຳເອົາຄວາມຈິງເຂົ້າສູ່ການປະຕິບັດຕົວຈິງໄດ້. ພວກເຂົາຈະມີຄວາມເປັນມະນຸດ ແລະ ມີຄວາມຮູ້ສຶກ ແລະ ທຸກຄົນຈະຮູ້ຈັກສາມຂັ້ນຕອນຂອງພາລະກິດຂອງຄວາມລອດພົ້ນຂອງພຣະເຈົ້າ. ນີ້ແມ່ນພາລະກິດທີ່ຈະໄດ້ຮັບຜົນສຳເລັດໃນຕອນສຸດທ້າຍ ແລະ ຜູ້ຄົນເຫຼົ່ານີ້ແມ່ນແກ້ວພະລຶກແຫ່ງພາລະກິດ 6.000 ປີ ໃນການຄຸ້ມຄອງ ແລະ ເປັນພະຍານທີ່ຊົງພະລັງທີ່ສຸດໃນການເອົາຊະນະຊາຕານ. ບັນດາຜູ້ທີ່ສາມາດເປັນພະຍານຕໍ່ພຣະເຈົ້າ ຈະສາມາດຮັບຄຳສັນຍາ ແລະ ພຣະພອນຂອງພຣະເຈົ້າ ແລະ ຈະເປັນກຸ່ມທີ່ຄົງຢູ່ຕະຫຼອດຈົນເຖິງຕອນສຸດທ້າຍ, ເປັນກຸ່ມທີ່ມີສິດອຳນາດຈາກພຣະເຈົ້າ ແລະ ເປັນພະຍານໃຫ້ແກ່ພຣະເຈົ້າ. ບາງເທື່ອພວກເຈົ້າອາດຈະກາຍເປັນສະມາຊິກຂອງກຸ່ມນີ້ ຫຼື ບາງເທື່ອອາດມີພຽງແຕ່ເຄິ່ງໜຶ່ງ ຫຼື ພຽງແຕ່ບາງຄົນເທົ່ານັ້ນ, ມັນກໍ່ຂຶ້ນກັບເຈດຕະນາຂອງພວກເຈົ້າ ແລະ ຂຶ້ນກັບການສະແຫວງຫາຂອງພວກເຈົ້າ.

# ມະນຸດຊາດທີ່ເສື່ອມຊາມຕ້ອງການ ຄວາມລອດພົ້ນຈາກພຣະເຈົ້າ ທີ່ບັງເກີດເປັນມະນຸດຫຼາຍຍິ່ງຂຶ້ນ

ພຣະເຈົ້າກາຍເປັນເນື້ອໜັງກໍຍ້ອນວ່າ ເປົ້າໝາຍແຫ່ງພາລະກິດຂອງພຣະອົງບໍ່ແມ່ນວິນຍານຂອງຊາຕານ ຫຼື ສິ່ງທີ່ບໍ່ມີຮູບຮ່າງ, ແຕ່ເປັນມະນຸດ ຜູ້ເຊິ່ງມີເນື້ອໜັງ ແລະ ຖືກຊາຕານເຮັດໃຫ້ເສື່ອມຊາມ. ແນ່ນອນ ຍ້ອນວ່າເນື້ອໜັງຂອງມະນຸດຖືກເຮັດໃຫ້ເສື່ອມຊາມ, ພຣະເຈົ້າຈຶ່ງເຮັດໃຫ້ມະນຸດທີ່ມີເນື້ອໜັງເປັນເປົ້າໝາຍແຫ່ງພາລະກິດຂອງພຣະອົງ; ຍິ່ງໄປກວ່ານັ້ນ, ເພາະວ່າ ມະນຸດເປັນເປົ້າໝາຍຂອງການເສື່ອມຊາມ, ພຣະເຈົ້າຈຶ່ງເຮັດໃຫ້ມະນຸດເປັນເປົ້າໝາຍຢ່າງດຽວຂອງພາລະກິດຂອງພຣະອົງໃນທຸກຂັ້ນຕອນຂອງພາລະກິດແຫ່ງຄວາມລອດພົ້ນຂອງພຣະອົງ. ມະນຸດເປັນສິ່ງມີຊີວິດທີ່ຕ້ອງຕາຍ, ມີເນື້ອໜັງ ແລະ ເລືອດ ແລະ ພຣະເຈົ້າຄືສິ່ງດຽວທີ່ສາມາດຊ່ວຍໃຫ້ມະນຸດລອດພົ້ນໄດ້. ໃນວິທີນີ້, ພຣະເຈົ້າຕ້ອງກາຍເປັນເນື້ອໜັງທີ່ມີຄຸນລັກສະນະຄືກັບມະນຸດເພື່ອປະຕິບັດພາລະກິດຂອງພຣະອົງ, ເພື່ອວ່າ ພາລະກິດຂອງພຣະອົງອາດບັນລຸຜົນຫຼາຍຂຶ້ນ. ພຣະເຈົ້າຕ້ອງກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງ ນັ້ນກໍຍ້ອນວ່າ ມະນຸດມີເນື້ອໜັງ ແລະ ບໍ່ສາມາດເອົາຊະນະຄວາມຜິດບາບ ຫຼື ຖອນຕົວອອກຈາກເນື້ອໜັງໄດ້. ເຖິງແມ່ນວ່າແກ່ນແທ້ ແລະ ຕົວຕົນຂອງພຣະເຈົ້າທີ່ບັງເກີດເປັນມະນຸດແຕກຕ່າງຈາກແກ່ນແທ້ ແລະ ຕົວຕົນຂອງມະນຸດຢ່າງຫຼວງຫຼາຍ, ແຕ່ລັກສະນະພາຍນອກຂອງພຣະອົງແມ່ນຄືກັນກັບມະນຸດ; ພຣະອົງມີລັກສະນະພາຍນອກຂອງຄົນທຳມະດາ ແລະ ດຳເນີນຊີວິດແບບຄົນທຳມະດາ ແລະ ຄົນທີ່ເຫັນພຣະອົງກໍບໍ່ສາມາດແຍກແຍະຄວາມແຕກຕ່າງຈາກຄົນທຳມະດາໄດ້. ລັກສະນະພາຍນອກທີ່ທຳມະດາ ແລະ ຄວາມເປັນມະນຸດທຳມະດານີ້ແມ່ນພຽງພໍສຳລັບພຣະອົງໃນການປະຕິບັດພາລະກິດອັນສັກສິດຂອງພຣະອົງໃນຄວາມເປັນມະນຸດທີ່ທຳມະດາ. ເນື້ອໜັງຂອງພຣະອົງເຮັດໃຫ້ພຣະອົງປະຕິບັດພາລະກິດຢູ່ໃນຄວາມເປັນມະນຸດທີ່ທຳມະດາ ແລະ ຊ່ວຍໃຫ້ພຣະອົງປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດ ແລະ ທ່າມກາງຄວາມເປັນມະນຸດທຳມະດາຂອງພຣະອົງ, ຍິ່ງໄປກວ່ານັ້ນ ກໍຍັງຊ່ວຍໃຫ້ພຣະອົງປະຕິບັດພາລະກິດແຫ່ງຄວາມລອດພົ້ນໃນທ່າມກາງມະນຸດ. ເຖິງແມ່ນວ່າ ຄວາມເປັນມະນຸດທຳມະດາຂອງພຣະອົງໄດ້ກໍ່ໃຫ້ເກີດຄວາມສັບສົນວຸ້ນວາຍຫຼາຍປະການໃນທ່າມກາງມະນຸດ, ຄວາມສັບສົນວຸ້ນວາຍດັ່ງກ່າວກໍບໍ່ມີຜົນກະທົບໃດໆຕໍ່ພາລະກິດທຳມະດາຂອງພຣະອົງ. ສະຫຼຸບກໍຄື ພາລະກິດຂອງເນື້ອໜັງທີ່ທຳມະດາຂອງພຣະອົງມີຜົນປະໂຫຍດຕໍ່ມະນຸດຫຼາຍທີ່ສຸດ. ເຖິງແມ່ນຄົນສ່ວນຫຼາຍບໍ່ຍອມຮັບຄວາມເປັນມະນຸດທຳມະດາຂອງພຣະອົງ, ພາລະກິດຂອງພຣະອົງກໍ່ຍັງສາມາດບັນລຸຜົນ ແລະ ຜົນເຫຼົ່ານີ້ແມ່ນຖືກບັນລຸຍ້ອນຄວາມເປັນມະນຸດທຳມະດາຂອງພຣະອົງ. ແນ່ນອນ ບໍ່ມີຂໍ້ສົງໄສໃນສິ່ງນີ້ເລີຍ. ຈາກພາລະກິດຂອງພຣະອົງໃນເນື້ອໜັງ, ມະນຸດໄດ້ຮັບຫຼາຍສິ່ງຫຼາຍຢ່າງເປັນສິບເທົ່າ ຫຼື ເປັນສິບສອງເທົ່າຫຼາຍກວ່າແນວຄິດທີ່ມີຢູ່ໃນທ່າມກາງມະນຸດກ່ຽວກັບຄວາມເປັນມະນຸດທຳມະດາຂອງພຣະອົງ ແລະ ແນວຄິດດັ່ງກ່າວຈະຖືກພາລະກິດຂອງ

ພຣະອົງກືນກິນໃນທີ່ສຸດ. ແລ້ວຜົນທີ່ພາລະກິດຂອງພຣະອົງໄດ້ບັນລຸ ເຊິ່ງໝາຍເຖິງ ຄວາມຮູ້ທີ່ມະນຸດມີກ່ຽວກັບພຣະອົງ ແມ່ນຈະມີຫຼາຍກວ່າແນວຄິດຂອງມະນຸດທີ່ມີກ່ຽວກັບພຣະອົງ. ບໍ່ມີທາງທີ່ຈະສາມາດຈິນຕະນາການ ຫຼື ຊັ່ງຊາພາລະກິດທີ່ພຣະອົງປະຕິບັດໃນເນື້ອໜັງໄດ້, ເພາະວ່າ ເນື້ອໜັງຂອງພຣະອົງບໍ່ຄືມະນຸດຄົນໃດໜຶ່ງທີ່ມີເນື້ອໜັງ; ເຖິງແມ່ນຮູບລັກສະນະພາຍນອກຈະຄ້າຍຄືກັນ, ແຕ່ແກ່ນແທ້ແມ່ນບໍ່ຄືກັນ. ເນື້ອໜັງຂອງພຣະອົງເຮັດໃຫ້ເກີດມີຫຼາຍແນວຄິດທີ່ຢູ່ທ່າມກາງມະນຸດເຊິ່ງກ່ຽວກັບພຣະເຈົ້າ, ແຕ່ເຖິງຢ່າງໃດກໍຕາມ ເນື້ອໜັງຂອງພຣະອົງຍັງສາມາດເຮັດໃຫ້ມະນຸດໄດ້ຮັບເອົາຄວາມຮູ້ຫຼາຍຢ່າງ ແລະ ເຖິງກັບສາມາດເອົາຊະນະບຸກຄົນໃດໜຶ່ງທີ່ມີຮ່າງກາຍພາຍນອກຄ້າຍຄືພຣະອົງ. ເນື່ອງຈາກວ່າ ພຣະອົງບໍ່ແມ່ນພຽງແຕ່ເປັນມະນຸດເທົ່ານັ້ນ, ແຕ່ເປັນພຣະເຈົ້າທີ່ມີຮູບຮ່າງພາຍນອກຂອງມະນຸດ ແລະ ບໍ່ມີໃຜທີ່ສາມາດຢັ່ງເຖິງ ຫຼື ເຂົ້າໃຈພຣະອົງໄດ້ຢ່າງສົມບູນ. ພຣະເຈົ້າທີ່ບໍ່ສາມາດເຫັນໄດ້ ແລະ ບໍ່ສາມາດຈັບຕ້ອງໄດ້, ໄດ້ຮັບຄວາມຮັກ ແລະ ຖືກຕ້ອນຮັບເອົາໂດຍທຸກຄົນ. ຖ້າພຣະເຈົ້າເປັນພຽງແຕ່ພຣະວິນຍານທີ່ມະນຸດບໍ່ສາມາດເຫັນໄດ້, ແລ້ວມັນກໍງ່າຍຫຼາຍທີ່ມະນຸດຈະເຊື່ອໃນພຣະເຈົ້າ. ຜູ້ຄົນສາມາດມີອິດສະຫຼະໃນຈິນຕະນາການຂອງພວກເຂົາ, ສາມາດເລືອກເອົາພາບລັກສະນະໃດທີ່ພວກເຂົາມັກ ໃຫ້ເປັນພາບລັກສະນະຂອງພຣະເຈົ້າເພື່ອເຮັດໃຫ້ຕົນເອງພໍໃຈ ແລະ ເຮັດໃຫ້ຕົນເອງຮູ້ສຶກມີຄວາມສຸກ. ໃນທຳນອງນີ້, ຜູ້ຄົນອາດເຮັດສິ່ງໃດກໍຕາມທີ່ພຣະເຈົ້າຂອງພວກເຂົາມັກທີ່ສຸດ ແລະ ປາຖະໜາໃຫ້ພວກເຂົາເຮັດ ໂດຍບໍ່ມີຄວາມລັງເລໃຈເລີຍ. ຍິ່ງໄປກວ່ານັ້ນ, ຜູ້ຄົນເຊື່ອວ່າ ບໍ່ມີໃຜທີ່ຈົງຮັກພັກດີ ແລະ ເຫຼື້ອມໃສຕໍ່ພຣະເຈົ້າຫຼາຍກວ່າພວກເຂົາ ແລະ ສຳລັບຄົນອື່ນໆແມ່ນໝາຕ່າງຊາດ ແລະ ບໍ່ຊື່ສັດຕໍ່ພຣະເຈົ້າ. ສາມາດເວົ້າໄດ້ວ່າ ຄົນທີ່ມີຄວາມເຊື່ອໃນພຣະເຈົ້າຢ່າງບໍ່ແຈ່ມແຈ້ງ ແລະ ອີງຕາມທິດສະດີແມ່ນສະແຫວງຫາສິ່ງນີ້; ສິ່ງທີ່ພວກເຂົາສະແຫວງຫາກໍລ້ວນແລ້ວແຕ່ຄືກັນ ໂດຍບໍ່ມີຄວາມແຕກຕ່າງແມ່ນແຕ່ໜ້ອຍດຽວ. ພຽງແຕ່ວ່າພາບລັກສະນະຂອງພຣະເຈົ້າທີ່ຢູ່ໃນຈິນຕະນາການຂອງພວກເຂົາແຕກຕ່າງກັນເທົ່ານັ້ນ, ແຕ່ຄວາມເປັນຈິງແລ້ວ ແກ່ນແທ້ຂອງພວກເຂົາແມ່ນຄືກັນ.

ມະນຸດບໍ່ມີບັນຫາຕໍ່ຄວາມເຊື່ອໃນພຣະເຈົ້າແບບອຳເພີໃຈຂອງພວກເຂົາ ແລະ ເຊື່ອໃນພຣະເຈົ້າໃນແບບໃດກໍຕາມທີ່ເຂົາພໍໃຈ. ນີ້ແມ່ນໜຶ່ງໃນ "ສິດທິ ແລະ ສິດເສລີພາບຂອງມະນຸດ" ເຊິ່ງບໍ່ມີໃຜອາດແຊກແຊງໄດ້, ຍ້ອນຜູ້ຄົນເຊື່ອໃນພຣະເຈົ້າຂອງພວກເຂົາເອງ ແລະ ບໍ່ແມ່ນພຣະເຈົ້າຂອງຄົນອື່ນ; ມັນຈຶ່ງເປັນຊັບສິນສ່ວນຕົວຂອງພວກເຂົາເອງ ແລະ ເກືອບທຸກຄົນມີຊັບສິນສ່ວນຕົວປະເພດນີ້. ຜູ້ຄົນຖືວ່າຊັບສິນນີ້ເປັນຊັບສົມບັດທີ່ມີຄ່າ, ແຕ່ສຳລັບພຣະເຈົ້າແລ້ວ ບໍ່ມີຫຍັງຕໍ່າຕ້ອຍ ຫຼື ໄຮ້ຄ່າໄປຫຼາຍກວ່ານີ້ອີກແລ້ວ, ຍ້ອນວ່າ ຊັບສິນສ່ວນຕົວປະເພດນີ້ຂອງມະນຸດແມ່ນບົ່ງບອກຢ່າງຊັດເຈນເຖິງການຕໍ່ຕ້ານພຣະເຈົ້າ. ມັນເປັນຍ້ອນພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ, ພຣະເຈົ້າຈຶ່ງກາຍເປັນເນື້ອໜັງທີ່ມີຮູບຮ່າງທີ່ສາມາດຈັບຕ້ອງໄດ້ ແລະ ສາມາດເຫັນ ແລະ ສຳຜັດໂດຍມະນຸດໄດ້. ພຣະອົງບໍ່ແມ່ນພຣະວິນຍານທີ່ບໍ່ມີຕົວຕົນ, ແຕ່ເປັນເນື້ອໜັງທີ່ມະນຸດສາມາດເບິ່ງເຫັນ ແລະ ພົວພັນນຳ. ເຖິງຢ່າງໃດກໍຕາມ, ພຣະເຈົ້າສ່ວນໃຫຍ່ທີ່ຜູ້ຄົນເຊື່ອ ແມ່ນເທວະດາທີ່ບໍ່ມີເນື້ອໜັງ, ບໍ່ມີຕົວຕົນ ແລະ ຍັງເປັນຮູບຮ່າງແບບເລື່ອນລອຍອີກດ້ວຍ. ໃນທຳນອງນີ້, ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ກາຍເປັນ

ສັດຕູຂອງຄົນສ່ວນຫຼາຍທີ່ເຊື່ອໃນພຣະເຈົ້າ ແລະ ໃນທຳນອງດຽວກັນ, ຄົນທີ່ບໍ່ສາມາດຍອມຮັບເອົາຄວາມຈິງຂອງການບັງເກີດເປັນມະນຸດຂອງພຣະເຈົ້າກໍກາຍເປັນຄູ່ຕໍ່ສູ້ຂອງພຣະເຈົ້າ. ມະນຸດມີແນວຄິດບໍ່ແມ່ນຍ້ອນວິທີການຄິດຂອງພວກເຂົາ ຫຼື ຍ້ອນຄວາມກະບົດຂອງພວກເຂົາ, ແຕ່ຍ້ອນຊັບສິນສ່ວນຕົວປະເພດນີ້ຂອງມະນຸດ. ມັນເປັນຍ້ອນຊັບສິນປະເພດນີ້ທີ່ຫຼາຍຄົນເສຍຊີວິດ ແລະ ແທ້ທີ່ຈິງກໍຄືມັນເປັນຍ້ອນພຣະເຈົ້າທີ່ເລື່ອນລອຍນີ້ທີ່ບໍ່ສາມາດສຳຜັດໄດ້, ບໍ່ສາມາດເຫັນໄດ້ ແລະ ບໍ່ມີຕົວຕົນໃນຄວາມເປັນຈິງທີ່ທຳລາຍຊີວິດຂອງມະນຸດ. ຊີວິດຂອງມະນຸດບໍ່ໄດ້ເສື່ອມເສຍຍ້ອນພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ແຮງໄກທີ່ຈະເສື່ອມເສຍຍ້ອນພຣະເຈົ້າແຫ່ງສະຫວັນ, ແຕ່ຍ້ອນພຣະເຈົ້າໃນຈິນຕະນາການຂອງມະນຸດເອງ. ເຫດຜົນດຽວທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດໄດ້ກາຍເປັນເນື້ອໜັງກໍຍ້ອນຄວາມຕ້ອງການຂອງມະນຸດທີ່ເສື່ອມຊາມນີ້. ມັນເປັນຍ້ອນຄວາມຕ້ອງການຂອງມະນຸດ ແຕ່ບໍ່ແມ່ນຂອງພຣະເຈົ້າ ແລະ ການເສຍສະຫຼະ ແລະ ການທົນທຸກໆຢ່າງຂອງພຣະອົງກໍເພື່ອເຫັນແກ່ມະນຸດຊາດ ແລະ ບໍ່ແມ່ນເພື່ອຜົນປະໂຫຍດຂອງພຣະເຈົ້າເອງ. ບໍ່ມີຂໍ້ດີ ແລະ ຂໍ້ເສຍ ຫຼື ລາງວັນສຳລັບພຣະເຈົ້າ; ພຣະອົງຈະບໍ່ໄດ້ຮັບຜົນເກັບກ່ຽວໃດໆໃນອະນາຄົດ, ແຕ່ເປັນສິ່ງທີ່ຕິດໜີ້ພຣະເຈົ້າແຕ່ດັ້ງເດີມ. ທຸກສິ່ງທີ່ພຣະເຈົ້າກະທຳ ແລະ ເສຍສະຫຼະສຳລັບມະນຸດຊາດບໍ່ແມ່ນເພື່ອໃຫ້ພຣະອົງໄດ້ຮັບລາງວັນທີ່ຍິ່ງໃຫຍ່, ແຕ່ເພື່ອເຫັນແກ່ມະນຸດທັງໝົດ. ເຖິງແມ່ນວ່າ ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງຈະປະກອບດ້ວຍຄວາມຫຍຸ້ງຍາກຫຼາຍຢ່າງທີ່ບໍ່ສາມາດຈິນຕະນາການໄດ້, ແຕ່ຜົນໄດ້ຮັບໃນທີ່ສຸດ ແມ່ນເລີດເກີນກວ່າຜົນຂອງພາລະກິດທີ່ພຣະວິນຍານປະຕິບັດໂດຍກົງ. ພາລະກິດຂອງເນື້ອໜັງຈຳເປັນຕ້ອງມີຄວາມລຳບາກຢ່າງຫຼວງຫຼາຍ ແລະ ເນື້ອໜັງແມ່ນບໍ່ສາມາດມີຕົວຕົນທີ່ຍິ່ງໃຫຍ່ແບບດຽວກັບພຣະວິນຍານ, ພຣະອົງບໍ່ສາມາດປະຕິບັດສິ່ງທີ່ເໜືອທຳມະຊາດແບບດຽວກັບພຣະວິນຍານ, ແລ້ວແຮງໄກທີ່ພຣະອົງຈະມີສິດອຳນາດຄືກັບພຣະວິນຍານ. ແຕ່ແກ່ນແທ້ແຫ່ງພາລະກິດທີ່ປະຕິບັດໂດຍເນື້ອໜັງທຳມະດານີ້ ແມ່ນຢູ່ເໜືອທາດແທ້ຂອງພາລະກິດທີ່ພຣະວິນຍານປະຕິບັດໂດຍກົງຢ່າງຫຼວງຫຼາຍ ແລະ ເນື້ອໜັງນີ້ເອງທີ່ເປັນຄຳຕອບໃຫ້ກັບຄວາມຕ້ອງການທຸກຢ່າງຂອງມະນຸດ. ເພື່ອໃຫ້ຄົນເຫຼົ່ານັ້ນໄດ້ຮັບຄວາມລອດພົ້ນ, ຄຸນຄ່າການນຳໃຊ້ຂອງພຣະວິນຍານແມ່ນຕໍ່າກວ່າຝ່າຍເນື້ອໜັງຫຼາຍ: ພາລະກິດຂອງພຣະວິນຍານສາມາດຄວບຄຸມທົ່ວຈັກກະວານ, ທົ່ວພູເຂົາ, ແມ່ນໍ້າ, ທະເລສາບ ແລະ ທົ່ວມະຫາສະມຸດ, ແຕ່ພາລະກິດຂອງເນື້ອໜັງແມ່ນເຊື່ອມໂຍງຢ່າງມີປະສິດທິພາບຫຼາຍຂຶ້ນກັບທຸກຄົນທີ່ພຣະອົງໄດ້ພົວພັນນຳ. ຍິ່ງໄປກວ່ານັ້ນ, ຮ່າງກາຍຂອງພຣະເຈົ້າທີ່ສາມາດຈັບຕ້ອງໄດ້ ແມ່ນເປັນຮ່າງກາຍທີ່ສາມາດເຂົ້າໃຈໄດ້ ແລະ ໄວ້ວາງໃຈໄດ້ໂດຍມະນຸດ ແລະ ສາມາດເຮັດໃຫ້ຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າເລິກເຊິ່ງຫຼາຍຂຶ້ນ ແລະ ສາມາດສ້າງຄວາມປະທັບໃຈຢ່າງເລິກເຊິ່ງກ່ຽວກັບການກະທຳຕົວຈິງຂອງພຣະເຈົ້າຕໍ່ມະນຸດ. ພາລະກິດຂອງພຣະວິນຍານຖືກປົກຄຸມດ້ວຍຄວາມເລິກລັບ; ມັນຍາກທີ່ຈະໃຫ້ມະນຸດຢັ່ງເຖິງ ແລະ ຍິ່ງຍາກຫຼາຍທີ່ຈະໃຫ້ມະນຸດເຫັນ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງສາມາດພຽງແຕ່ເພິ່ງພາຈິນຕະນາການທີ່ວ່າງເປົ່າເທົ່ານັ້ນ. ແຕ່, ພາລະກິດຂອງເນື້ອໜັງແມ່ນທຳມະດາ ແລະ ອີງຕາມຄວາມເປັນຈິງ ແລະ ມີສະຕິປັນຍາເປັນເລີດ ແລະ ເປັນ

ຄວາມຈິງທີ່ສາມາດເບິ່ງເຫັນດ້ວຍຕາຂອງມະນຸດ; ມະນຸດສາມາດພະເຊີນກັບສະຕິປັນຍາແຫ່ງພາລະກິດຂອງພຣະເຈົ້າດ້ວຍຕົວຂອງພວກເຂົາເອງ ແລະ ບໍ່ຈຳເປັນຕ້ອງໃຊ້ຈິນຕະນາການຢ່າງເລິກເຊິ່ງຂອງພວກເຂົາ. ນີ້ແມ່ນຄວາມແນ່ນອນ ແລະ ຄຸນຄ່າທີ່ແທ້ຈິງແຫ່ງພາລະກິດຂອງພຣະເຈົ້າທີ່ສະຖິດຢູ່ໃນເນື້ອໜັງ. ພຣະວິນຍານສາມາດເຮັດພຽງແຕ່ສິ່ງທີ່ມະນຸດເບິ່ງບໍ່ເຫັນ ແລະ ຍາກທີ່ຈະໃຫ້ພວກເຂົາຈິນຕະນາການ, ຕົວຢ່າງເຊັ່ນ: ແສງສະຫວ່າງຂອງພຣະວິນຍານ, ການເຄື່ອນໄຫວຂອງພຣະວິນຍານ ແລະ ການນຳພາຂອງພຣະວິນຍານ, ແຕ່ສຳລັບມະນຸດທີ່ມີຄວາມຄິດ, ສິ່ງເຫຼົ່ານີ້ບໍ່ໄດ້ສະໜອງຄວາມໝາຍຢ່າງຊັດເຈນເລີຍ. ສິ່ງເຫຼົ່ານັ້ນພຽງແຕ່ສະໜອງຄວາມໝາຍແບບເລື່ອນລອຍ ຫຼື ບໍ່ຈະແຈ້ງ ແລະ ບໍ່ສາມາດໃຫ້ການແນະນຳດ້ວຍຄຳເວົ້າໄດ້. ແຕ່ພາລະກິດຂອງພຣະເຈົ້າທີ່ສະຖິດຢູ່ໃນເນື້ອໜັງແມ່ນແຕກຕ່າງຫຼາຍ: ມັນກ່ຽວພັນມີການນຳພາຂອງພຣະທຳຢ່າງຖືກຕ້ອງ, ມັນມີຄວາມປະສົງທີ່ຊັດເຈນ ແລະ ມີເປົ້າໝາຍຢ່າງຈະແຈ້ງ. ດັ່ງນັ້ນ ມະນຸດຈຶ່ງບໍ່ຈຳເປັນຕ້ອງງົມຫາ ຫຼື ໃຊ້ຈິນຕະນາການຂອງພວກເຂົາ ແລະ ກໍບໍ່ຈຳເປັນຕ້ອງຄາດເດົາເລີຍ. ນີ້ແມ່ນຄວາມຊັດເຈນຂອງພາລະກິດໃນເນື້ອໜັງ ແລະ ມັນແຕກຕ່າງຈາກພາລະກິດຂອງພຣະວິນຍານຫຼາຍ. ພາລະກິດຂອງພຣະວິນຍານພຽງແຕ່ເໝາະສົມສຳລັບຂອບເຂດທີ່ຈຳກັດ ແລະ ບໍ່ສາມາດແທນພາລະກິດຂອງເນື້ອໜັງໄດ້. ພາລະກິດຂອງເນື້ອໜັງເຮັດໃຫ້ມະນຸດມີເປົ້າໝາຍທີ່ແນ່ນອນ ແລະ ມີຄວາມຈຳເປັນ ແລະ ເປັນຈິງຫຼາຍທີ່ສຸດ, ເຮັດໃຫ້ມີຄວາມຮູ້ຢ່າງມີຄຸນຄ່າຫຼາຍກວ່າພາລະກິດຂອງພຣະວິນຍານ. ພາລະກິດທີ່ມີຄຸນຄ່າສູງສຸດຕໍ່ມະນຸດທີ່ເສື່ອມຊາມແມ່ນພາລະກິດທີ່ສະໜອງພຣະທຳທີ່ຖືກຕ້ອງ, ມີເປົ້າໝາຍທີ່ຊັດເຈນໃນການສະແຫວງຫາ ແລະ ສາມາດເຫັນ ແລະ ສຳຜັດໄດ້. ມີພຽງແຕ່ພາລະກິດທີ່ເປັນຈິງ ແລະ ການນຳພາທີ່ຖືກກັບສະພາບການເທົ່ານັ້ນຈຶ່ງເໝາະສົມກັບລົດນິຍົມຂອງມະນຸດ ແລະ ມີພຽງແຕ່ພາລະກິດທີ່ເປັນຈິງເທົ່ານັ້ນຈຶ່ງສາມາດຊ່ວຍເຫຼືອມະນຸດໃຫ້ລອດພົ້ນຈາກອຸປະນິໄສທີ່ເສື່ອມຊາມ ແລະ ຊົ່ວຊ້ານັ້ນໄດ້. ມີພຽງແຕ່ພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນທີ່ສາມາດບັນລຸສິ່ງນີ້ໄດ້; ມີພຽງແຕ່ພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນທີ່ສາມາດຊ່ວຍມະນຸດໃຫ້ລອດພົ້ນຈາກອຸປະນິໄສເສື່ອມຊາມ ແລະ ຄວາມຊົ່ວຊ້າທີ່ຜ່ານມາຂອງພວກເຂົາ. ເຖິງແມ່ນວ່າພຣະວິນຍານມີແກ່ນແທ້ໂດຍທຳມະຊາດຂອງພຣະເຈົ້າ, ມີພຽງແຕ່ເນື້ອໜັງຂອງພຣະອົງເທົ່ານັ້ນທີ່ສາມາດປະຕິບັດພາລະກິດເຊັ່ນນີ້ໄດ້. ຖ້າພຣະວິນຍານປະຕິບັດພາລະກິດພຽງຜູ້ດຽວ, ແລ້ວມັນກໍຈະເປັນໄປບໍ່ໄດ້ທີ່ຈະໃຫ້ພາລະກິດຂອງພຣະອົງມີປະສິດທິພາບ, ນີ້ຄືຄວາມຈິງທີ່ເຫັນໄດ້ຢ່າງຊັດເຈນ. ເຖິງແມ່ນວ່າ ຫຼາຍຄົນໄດ້ກາຍເປັນສັດຕູຂອງພຣະເຈົ້າ ຍ້ອນເນື້ອໜັງນີ້, ເມື່ອພຣະອົງສະຫຼຸບພາລະກິດຂອງພຣະອົງ, ຄົນທີ່ຕໍ່ຕ້ານພຣະອົງຈະບໍ່ພຽງແຕ່ເຊົາເປັນສັດຕູຂອງພຣະເຈົ້າ, ແຕ່ໃນທາງກົງກັນຂ້າມ ພວກເຂົາຈະກາຍເປັນພະຍານຂອງພຣະອົງ. ພວກເຂົາຈະກາຍເປັນພະຍານທີ່ຖືກພຣະອົງເອົາຊະນະ, ພະຍານທີ່ສອດຄ່ອງກັບພຣະອົງ ແລະ ບໍ່ສາມາດແຍກອອກຈາກພຣະອົງໄດ້. ພຣະອົງຈະເຮັດໃຫ້ມະນຸດຮູ້ຈັກຄວາມສຳຄັນຂອງພາລະກິດຂອງພຣະອົງທາງຝ່າຍເນື້ອໜັງທີ່ມີຕໍ່ມະນຸດ ແລະ ມະນຸດຈະຮູ້ຈັກເຖິງຄວາມສຳຄັນຂອງເນື້ອໜັງນີ້ທີ່ມີຕໍ່ຄວາມໝາຍຂອງການເປັນຢູ່ຂອງມະນຸດ, ຈະຮູ້ຈັກຄຸນຄ່າທີ່ແທ້ຈິງຂອງພຣະອົງທີ່ມີຕໍ່ການເຕີບໂຕຂອງຊີວິດມະນຸດ

ແລະ ຍິ່ງໄປກວ່ານັ້ນ ຈະຮູ້ຈັກວ່າ ເນື້ອໜັງນີ້ຈະກາຍເປັນນໍ້າພຸແຫ່ງຊີວິດທີ່ມີຈິດວິນຍານ ເຊິ່ງມະນຸດບໍ່ສາມາດອອກຫ່າງໄດ້. ເຖິງແມ່ນວ່າ ເນື້ອໜັງທີ່ເປັນມະນຸດຂອງພຣະເຈົ້າຈະໄກຈາກຄວາມຄ້າຍຄືກັບຕົວຕົນ ແລະ ຕໍາແໜ່ງຂອງພຣະເຈົ້າ ແລະ ສໍາລັບມະນຸດແລ້ວ ເບິ່ງຄືກັບວ່າບໍ່ສອດຄ່ອງກັບສະຖານະຕົວຈິງຂອງພຣະອົງ, ເນື້ອໜັງນີ້ ເຊິ່ງບໍ່ມີພາບລັກສະນະທີ່ແທ້ຈິງຂອງພຣະເຈົ້າ ຫຼື ຕົວຕົນທີ່ແທ້ຈິງຂອງພຣະເຈົ້າ ແມ່ນສາມາດປະຕິບັດພາລະກິດທີ່ພຣະວິນຍານຂອງພຣະເຈົ້າບໍ່ສາມາດປະຕິບັດໂດຍກົງໄດ້. ເຊິ່ງສິ່ງດັ່ງກ່າວຄືຄວາມໝາຍ ແລະ ຄຸນຄ່າທີ່ແທ້ຈິງຂອງການບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ມັນຄືຄວາມໝາຍ ແລະ ຄຸນຄ່ານີ້ທີ່ເຮັດໃຫ້ມະນຸດບໍ່ສາມາດເຂົ້າໃຈ ແລະ ຍອມຮັບໄດ້. ເຖິງແມ່ນວ່າມະນຸດຊາດເຄົາລົບພຣະວິນຍານຂອງພຣະເຈົ້າ ແລະ ດູຖູກເນື້ອໜັງຂອງພຣະເຈົ້າ, ບໍ່ວ່າພວກເຂົາຈະເບິ່ງ ຫຼື ຄິດແນວໃດກໍຕາມ, ຄວາມໝາຍ ແລະ ຄຸນຄ່າທີ່ແທ້ຈິງຂອງເນື້ອໜັງແມ່ນມີຫຼາຍກວ່າພຣະວິນຍານ. ແນ່ນອນ, ນີ້ແມ່ນກ່ຽວຂ້ອງກັບມະນຸດຊາດທີ່ເສື່ອມຊາມເທົ່ານັ້ນ. ສໍາລັບທຸກຄົນທີ່ສະແຫວງຫາຄວາມຈິງ ແລະ ປາຖະໜາຫາການປາກົດຕົວຂອງພຣະເຈົ້າ, ພາລະກິດຂອງພຣະວິນຍານສາມາດສະໜອງພຽງແຕ່ການດົນບັນດານໃຈ ຫຼື ແຮງກະຕຸ້ນເທົ່ານັ້ນ ແລະ ໃຫ້ຄວາມຮູ້ສຶກເຖິງຄວາມມະຫັດສະຈັນທີ່ບໍ່ສາມາດອະທິບາຍໄດ້ ແລະ ບໍ່ສາມາດຈິນຕະນາການໄດ້; ແລະ ເຮັດໃຫ້ມີຄວາມຮູ້ສຶກວ່າ ມັນຍິ່ງໃຫຍ່, ເປັນເລີດ ແລະ ເປັນຕາຍ້ອງຍໍສັນລະເສີນ, ນອກນັ້ນກໍຍັງເປັນສິ່ງທີ່ບໍ່ສາມາດບັນລຸໄດ້ ຫຼື ສິ່ງທີ່ທຸກຄົນບໍ່ສາມາດຮັບໄດ້. ມະນຸດ ແລະ ພຣະວິນຍານຂອງພຣະເຈົ້າສາມາດພຽງແຕ່ເຝົ້າເບິ່ງກັນ ແລະ ກັນຈາກທາງໄກ ຄືກັບວ່າມີໄລຍະທາງທີ່ໄກຫຼາຍລະຫວ່າງພວກເຂົາ ແລະ ພວກເຂົາຈະບໍ່ສາມາດເຂົ້າກັນໄດ້ຈັກເທື່ອ ເໝືອນກັບວ່າມະນຸດ ແລະ ພຣະເຈົ້າຖືກແຍກອອກຈາກກັນໂດຍເສັ້ນແບ່ງທີ່ເບິ່ງບໍ່ເຫັນ. ໃນຄວາມເປັນຈິງກໍຄື ນີ້ແມ່ນພາບລວງຕາທີ່ພຣະວິນຍານມອບໃຫ້ກັບມະນຸດ ເຊິ່ງນັ້ນເປັນເພາະວ່າພຣະວິນຍານ ແລະ ມະນຸດບໍ່ແມ່ນປະເພດດຽວກັນ ແລະ ຈະບໍ່ຢູ່ຮ່ວມໂລກດຽວກັນຈັກເທື່ອ ແລະ ເປັນຍ້ອນພຣະວິນຍານບໍ່ມີສິ່ງໃດເໝືອນມະນຸດເລີຍ. ດ້ວຍເຫດນັ້ນ ມະນຸດຈຶ່ງບໍ່ຈໍາເປັນຕ້ອງມີພຣະວິນຍານ, ຍ້ອນພຣະວິນຍານບໍ່ສາມາດປະຕິບັດພາລະກິດທີ່ມະນຸດຕ້ອງການທີ່ສຸດໂດຍກົງໄດ້. ພາລະກິດຂອງເນື້ອໜັງມອບເປົ້າໝາຍທີ່ແທ້ຈິງໃຫ້ກັບມະນຸດໃນການສະແຫວງຫາ, ມອບພຣະທໍາທີ່ຊັດເຈນ ແລະ ຄວາມຮູ້ສຶກວ່າ ພຣະອົງເປັນຈິງ ແລະ ທໍາມະດາ, ພຣະອົງຖ່ອມຕົນ ແລະ ປົກກະຕິ. ເຖິງແມ່ນວ່າ ມະນຸດອາດຈະຢໍາເກງພຣະອົງ, ແຕ່ສໍາລັບຫຼາຍຄົນ ພຣະອົງແມ່ນງ່າຍທີ່ຈະເຂົ້າໃຈ ນັ້ນກໍຄື ມະນຸດສາມາດເຫັນໃບໜ້າຂອງພຣະອົງ ແລະ ໄດ້ຍິນສຽງຂອງພຣະອົງ ແລະ ເຂົາບໍ່ຈໍາເປັນຕ້ອງເບິ່ງພຣະອົງຈາກໄກໆ. ເນື້ອໜັງນີ້ເຮັດໃຫ້ມີຄວາມຮູ້ສຶກວ່າ ມະນຸດເຂົ້າເຖິງໄດ້, ບໍ່ໄດ້ຢູ່ຫ່າງໄກ ຫຼື ເປັນສິ່ງທີ່ບໍ່ສາມາດຢັ່ງເຖິງໄດ້, ແຕ່ເປັນສິ່ງທີ່ສາມາດເຫັນ ແລະ ສາມາດສໍາຜັດໄດ້, ນີ້ກໍຍ້ອນວ່າ ເນື້ອໜັງດັ່ງກ່າວແມ່ນຢູ່ໃນໂລກດຽວກັນກັບມະນຸດ.

ສໍາລັບທຸກຄົນທີ່ດໍາລົງຊີວິດໃນເນື້ອໜັງ, ການປ່ຽນແປງອຸປະນິໄສຂອງພວກເຂົາຈໍາເປັນຕ້ອງມີເປົ້າໝາຍໃຫ້ສະແຫວງຫາ ແລະ ການຮູ້ຈັກພຣະເຈົ້າກໍຈໍາເປັນຕ້ອງມີການເປັນພະຍານເຖິງການກະທໍາທີ່ເປັນຈິງ ແລະ ໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ທັງສອງຢ່າງນີ້ພຽງແຕ່ສາມາດບັນລຸໄດ້ໂດຍເນື້ອໜັງ

ຂອງພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນ ແລະ ທັງສອງຢ່າງນີ້ກໍພຽງແຕ່ຖືກເຮັດໃຫ້ສຳເລັດໂດຍເນື້ອໜັງທີ່ທຳມະດາ ແລະ ເປັນຈິງເທົ່ານັ້ນ. ນີ້ຄືເຫດຜົນທີ່ວ່າ ເປັນຫຍັງການບັງເກີດເປັນມະນຸດຈຶ່ງຈຳເປັນ ແລະ ເປັນຫຍັງມັນຈຶ່ງຈຳເປັນຕໍ່ມະນຸດຊາດທີ່ເສື່ອມຊາມທັງໝົດ. ຍ້ອນຜູ້ຄົນຈຳເປັນຕ້ອງຮູ້ຈັກພຣະເຈົ້າ, ພາບລັກສະນະຂອງພຣະເຈົ້າທີ່ເລື່ອນລອຍ ແລະ ເໜືອທຳມະຊາດຕ້ອງຖືກກຳຈັດອອກຈາກຫົວໃຈຂອງພວກເຂົາ ແລະ ຍ້ອນພວກເຂົາຈຳເປັນຕ້ອງປະຖິ້ມອຸປະນິໄສທີ່ເສື່ອມຊາມຂອງພວກເຂົາ, ພວກເຂົາຈຶ່ງຈຳເປັນຕ້ອງຮູ້ຈັກອຸປະນິໄສທີ່ເສື່ອມຊາມຂອງພວກເຂົາກ່ອນ. ຖ້າມະນຸດພຽງແຕ່ປະຕິບັດພາລະກິດເພື່ອກຳຈັດພາບລັກສະນະຂອງພຣະເຈົ້າທີ່ເລື່ອນລອຍອອກຈາກຫົວໃຈຂອງຜູ້ຄົນ, ແລ້ວພວກເຂົາກໍຈະບໍ່ສາມາດບັນລຸຜົນໄດ້ຢ່າງເໝາະສົມ. ພາບລັກຂອງພຣະເຈົ້າທີ່ເລື່ອນລອຍໃນຫົວໃຈຂອງຜູ້ຄົນບໍ່ສາມາດຖືກເປີດໂປງ, ປະຖິ້ມ ຫຼື ກຳຈັດອອກຢ່າງສົມບູນໂດຍພຣະທຳແຕ່ຢ່າງດຽວ. ການເຮັດແບບນັ້ນ, ໃນທີ່ສຸດ ມັນກໍຍັງຈະເປັນໄປບໍ່ໄດ້ທີ່ຈະກຳຈັດສິ່ງທີ່ຝັງເລິກເຫຼົ່ານີ້ອອກຈາກຜູ້ຄົນ. ມີພຽງແຕ່ໂດຍການແທນທີ່ສິ່ງທີ່ເລື່ອນລອຍ ແລະ ເໜືອທຳມະຊາດເຫຼົ່ານີ້ກັບພຣະເຈົ້າທີ່ເປັນຈິງ ແລະ ພາບລັກທີ່ແທ້ຈິງຂອງພຣະເຈົ້າ ແລະ ການເຮັດໃຫ້ຜູ້ຄົນໄດ້ຮູ້ຈັກພວກມັນເທື່ອລະໜ້ອຍ, ມັນຈຶ່ງຈະສາມາດບັນລຸຜົນທີ່ເໝາະສົມໄດ້. ມະນຸດຮູ້ຈັກວ່າ ພຣະເຈົ້າທີ່ພວກເຂົາສະແຫວງຫາໃນອະດີດນັ້ນເປັນພຣະເຈົ້າທີ່ເລື່ອນລອຍ ແລະ ຢູ່ເໜືອທຳມະຊາດ. ພວກເຂົາຮູ້ວ່າສິ່ງທີ່ສາມາດບັນລຸຜົນໄດ້ ບໍ່ແມ່ນການນຳພາໂດຍກົງຂອງພຣະວິນຍານ ແລະ ແຮງໄກທີ່ຈະເປັນຄຳສັ່ງສອນຂອງບຸກຄົນໃດໜຶ່ງ, ແຕ່ເປັນການນຳພາຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ແນວຄິດຂອງມະນຸດຈະຖືກເປີດອອກເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດພາລະກິດຂອງພຣະອົງຢ່າງເປັນທາງການ, ຍ້ອນຄວາມທຳມະດາ ແລະ ຄວາມເປັນຈິງຂອງພຣະເຈົ້າທີ່ບັງເກີດເປັນມະນຸດນັ້ນ ແມ່ນສິ່ງທີ່ກົງກັນຂ້າມກັບພຣະເຈົ້າທີ່ເລື່ອນລອຍ ແລະ ຢູ່ເໜືອທຳມະຊາດທີ່ຢູ່ໃນຈິນຕະນາການຂອງມະນຸດ. ແນວຄິດດັ້ງເດີມຂອງມະນຸດພຽງແຕ່ສາມາດຖືກເປີດເຜີຍເມື່ອປຽບທຽບຄວາມແຕກຕ່າງຈາກພຣະເຈົ້າທີ່ບັງເກີດເປັນມະນຸດ. ຫາກປາສະຈາກການປຽບທຽບກັບພຣະເຈົ້າທີ່ບັງເກີດເປັນມະນຸດ, ແນວຄິດຂອງມະນຸດກໍບໍ່ສາມາດຖືກເປີດເຜີຍໄດ້; ເວົ້າອີກຢ່າງໜຶ່ງກໍ່ຄື ຫາກປາສະຈາກຄວາມເປັນຈິງເຊິ່ງເປັນສິ່ງປຽບທຽບສິ່ງທີ່ບໍ່ແຈ່ມແຈ້ງກໍບໍ່ສາມາດຖືກເປີດເຜີຍໄດ້. ບໍ່ມີໃຜສາມາດໃຊ້ພຣະທຳເພື່ອປະຕິບັດພາລະກິດນີ້ ແລະ ບໍ່ມີໃຜສາມາດກ່າວພາລະກິດນີ້ໂດຍໃຊ້ພຣະທຳ. ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດປະຕິບັດພາລະກິດຂອງພຣະອົງໄດ້ ແລະ ບໍ່ມີໃຜສາມາດປະຕິບັດພາລະກິດນີ້ແທນພຣະອົງໄດ້. ບໍ່ວ່າພາສາຂອງມະນຸດຈະອຸດົມສົມບູນສໍ່າໃດກໍຕາມ, ພວກເຂົາຈະບໍ່ສາມາດອະທິບາຍເຖິງຄວາມເປັນຈິງ ແລະ ຄວາມທຳມະດາຂອງພຣະເຈົ້າໄດ້. ມະນຸດຈະສາມາດຮູ້ຈັກພຣະເຈົ້າໄດ້ດີຂຶ້ນ ແລະ ສາມາດເຫັນພຣະອົງໄດ້ຢ່າງຊັດເຈນຂຶ້ນ ຖ້າພຣະເຈົ້າປະຕິບັດພາລະກິດທ່າມກາງມະນຸດດ້ວຍຕົວພຣະອົງເອງ ແລະ ສະແດງພາບລັກສະນະຂອງພຣະອົງ ແລະ ການເປັນຢູ່ຂອງພຣະອົງອອກມາທັງໝົດ. ບໍ່ມີມະນຸດທີ່ມີເນື້ອໜັງຄົນໃດສາມາດບັນລຸຜົນນີ້ໄດ້. ແນ່ນອນ, ພຣະວິນຍານຂອງພຣະເຈົ້າກໍຍັງບໍ່ສາມາດບັນລຸຜົນນີ້ໄດ້. ພຣະເຈົ້າສາມາດຊ່ວຍມະນຸດທີ່ເສື່ອມຊາມໃຫ້ລອດພົ້ນຈາກອິດທິພົນຂອງຊາຕານ, ແຕ່

ພຣະວິນຍານຂອງພຣະເຈົ້າບໍ່ສາມາດເຮັດໃຫ້ພາລະກິດນີ້ສຳເລັດໄດ້ໂດຍກົງ; ກົງກັນຂ້າມ, ມີພຽງແຕ່ເນື້ອໜັງ ເຊິ່ງເປັນເຄື່ອງນຸ່ງຂອງພຣະວິນຍານຂອງພຣະເຈົ້າ, ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າເທົ່ານັ້ນ ທີ່ສາມາດປະຕິບັດພາລະກິດນີ້ໄດ້. ເນື້ອໜັງນີ້ແມ່ນມະນຸດ ແລະ ຍັງແມ່ນພຣະເຈົ້າ, ເປັນມະນຸດທີ່ມີຄວາມເປັນມະນຸດທຳມະດາ ແລະ ຍັງເປັນພຣະເຈົ້າທີ່ມີຄວາມເປັນພຣະເຈົ້າຢ່າງສົມບູນ. ແລ້ວດ້ວຍເຫດນັ້ນ ເຖິງແມ່ນເນື້ອໜັງນີ້ບໍ່ແມ່ນພຣະວິນຍານຂອງພຣະເຈົ້າ ແລະ ແຕກຕ່າງຈາກພຣະວິນຍານຫຼາຍ, ພຣະອົງກໍຍັງເປັນພຣະເຈົ້າທີ່ບັງເກີດເປັນມະນຸດຜູ້ທີ່ເປັນພຣະວິນຍານ ແລະ ທັງເປັນເນື້ອໜັງທີ່ຊ່ວຍມະນຸດໃຫ້ລອດພົ້ນ. ບໍ່ວ່າພຣະອົງຈະຖືກເອີ້ນເປັນສິ່ງໃດກໍຕາມ, ໃນທີ່ສຸດແລ້ວ ພຣະອົງກໍຍັງເປັນພຣະເຈົ້າທີ່ຊ່ວຍມະນຸດຊາດໃຫ້ລອດພົ້ນ. ຍ້ອນພຣະວິນຍານຂອງພຣະເຈົ້າບໍ່ສາມາດແຍກອອກຈາກເນື້ອໜັງໄດ້ ແລະ ພາລະກິດຂອງເນື້ອໜັງແມ່ນຍັງເປັນພາລະກິດຂອງພຣະວິນຍານຂອງພຣະເຈົ້າ; ພຽງແຕ່ວ່າພາລະກິດນີ້ບໍ່ໄດ້ຖືກປະຕິບັດໂດຍໃຊ້ຕົວຕົນຂອງພຣະວິນຍານ, ແຕ່ຖືກປະຕິບັດໂດຍໃຊ້ຕົວຕົນຂອງເນື້ອໜັງ. ພາລະກິດທີ່ຈຳເປັນຕ້ອງຖືກປະຕິບັດໂດຍພຣະວິນຍານໂດຍກົງກໍບໍ່ຈຳເປັນຕ້ອງມີການບັງເກີດເປັນມະນຸດ ແລະ ພາລະກິດທີ່ເນື້ອໜັງປະຕິບັດກໍບໍ່ສາມາດຖືກປະຕິບັດໂດຍພຣະວິນຍານໂດຍກົງໄດ້. ພາລະກິດດັ່ງກ່າວຕ້ອງໄດ້ປະຕິບັດໂດຍພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນ. ນີ້ແມ່ນສິ່ງທີ່ຈຳເປັນສຳລັບພາລະກິດນີ້ ແລະ ມັນເປັນສິ່ງທີ່ຈຳເປັນຕໍ່ມະນຸດຊາດທີ່ເສື່ອມຊາມ. ໃນພາລະກິດສາມຂັ້ນຕອນຂອງພຣະເຈົ້າ, ມີພຽງແຕ່ຂັ້ນຕອນດຽວທີ່ຖືກປະຕິບັດໂດຍພຣະວິນຍານໂດຍກົງ ແລະ ສອງຂັ້ນຕອນທີ່ເຫຼືອແມ່ນຖືກປະຕິບັດໂດຍພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ບໍ່ແມ່ນໂດຍພຣະວິນຍານໂດຍກົງ. ພາລະກິດຂອງຍຸກແຫ່ງພຣະບັນຍັດທີ່ຖືກປະຕິບັດໂດຍພຣະວິນຍານບໍ່ກ່ຽວພັນກັບການປ່ຽນແປງອຸປະນິໄສທີ່ເສື່ອມຊາມຂອງມະນຸດ ແລະ ມັນບໍ່ໄດ້ມີສ່ວນກ່ຽວຂ້ອງໃດເລີຍກັບຄວາມຮູ້ຂອງມະນຸດທີ່ມີກ່ຽວກັບພຣະເຈົ້າ. ເຖິງຢ່າງໃດກໍຕາມ ພາລະກິດຂອງເນື້ອໜັງຂອງພຣະເຈົ້າທີ່ຢູ່ໃນຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງອານາຈັກແມ່ນກ່ຽວພັນເຖິງອຸປະນິໄສທີ່ເສື່ອມຊາມຂອງມະນຸດ ແລະ ຄວາມຮູ້ທີ່ພວກເຂົາມີກ່ຽວກັບພຣະເຈົ້າ ແລະ ເປັນສ່ວນທີ່ສຳຄັນ ແລະ ຈຳເປັນຂອງພາລະກິດແຫ່ງຄວາມລອດພົ້ນ. ສະນັ້ນ, ມະນຸດຊາດທີ່ເສື່ອມຊາມຈຶ່ງຕ້ອງການຄວາມລອດພົ້ນຈາກພຣະເຈົ້າທີ່ບັງເກີດເປັນມະນຸດຫຼາຍຍິ່ງຂຶ້ນ ແລະ ຕ້ອງການພາລະກິດໂດຍກົງຂອງພຣະເຈົ້າທີ່ບັງເກີດເປັນມະນຸດຫຼາຍຍິ່ງຂຶ້ນ. ມະນຸດຊາດຕ້ອງການໃຫ້ພຣະເຈົ້າທີ່ບັງເກີດເປັນມະນຸດລ້ຽງດູພວກເຂົາ, ສະໜັບສະໜູນພວກເຂົາ, ຫົດນໍ້າໃຫ້ພວກເຂົາ, ລ້ຽງເຂົ້າພວກເຂົາ, ພິພາກສາ ແລະ ຕີສອນພວກເຂົາ; ພວກເຂົາຕ້ອງການຄວາມເມດຕາ ແລະ ການໄຖ່ບາບຫຼາຍຂຶ້ນຈາກພຣະເຈົ້າທີ່ບັງເກີດເປັນມະນຸດ. ມີພຽງແຕ່ພຣະເຈົ້າທີ່ຢູ່ໃນເນື້ອໜັງເທົ່ານັ້ນທີ່ສາມາດເປັນຄົນທີ່ໄວ້ວາງໃຈໄດ້ຂອງມະນຸດ, ເປັນຄົນລ້ຽງແກະຂອງມະນຸດ, ຄວາມຊ່ວຍເຫຼືອໃນປັດຈຸບັນຂອງມະນຸດ ແລະ ທຸກສິ່ງເຫຼົ່ານີ້ແມ່ນຈຳເປັນຕ້ອງໃຫ້ມີການບັງເກີດເປັນມະນຸດທັງໃນປັດຈຸບັນ ແລະ ໃນອະດີດຜ່ານມາ.

ມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ເປັນສິ່ງສູງສົ່ງທີ່ສຸດໃນບັນດາສິ່ງຖືກສ້າງທັງໝົດຂອງພຣະເຈົ້າ, ສະນັ້ນ ມະນຸດຈຶ່ງຕ້ອງການຄວາມລອດພົ້ນຂອງພຣະເຈົ້າ. ເປົ້າໝາຍຂອງຄວາມລອດ

ພົ້ນແມ່ນມະນຸດ, ບໍ່ແມ່ນຊາຕານ ແລະ ສິ່ງທີ່ຈະຖືກຊ່ວຍໃຫ້ໄດ້ພົ້ນແມ່ນເນື້ອໜັງຂອງມະນຸດ ແລະ ວິນຍານຂອງມະນຸດ ແລະ ບໍ່ແມ່ນພວກມານຮ້າຍ. ຊາຕານແມ່ນເປົ້າໝາຍຂອງການທຳລາຍລ້າງຂອງພຣະເຈົ້າ, ມະນຸດເປັນເປົ້າໝາຍຂອງຄວາມລອດພົ້ນຂອງພຣະເຈົ້າ ແລະ ເນື້ອໜັງຂອງມະນຸດກໍຖືກຊາຕານເຮັດໃຫ້ເສື່ອມຊາມ, ສະນັ້ນສິ່ງທຳອິດທີ່ຈະຖືກຊ່ວຍໃຫ້ພົ້ນໄດ້ຈຶ່ງຕ້ອງເປັນເນື້ອໜັງຂອງມະນຸດ. ເນື້ອໜັງຂອງມະນຸດຖືກເຮັດໃຫ້ເສື່ອມຊາມຢ່າງເລິກເຊິ່ງທີ່ສຸດ ແລະ ມັນໄດ້ກາຍເປັນສິ່ງທີ່ຕໍ່ຕ້ານພຣະເຈົ້າ, ຫຼາຍຈົນເຖິງຂັ້ນທີ່ມັນຕໍ່ຕ້ານ ແລະ ປະຕິເສດການເປັນຢູ່ຂອງພຣະເຈົ້າຢ່າງເປີດເຜີຍ. ເນື້ອໜັງນີ້ເປັນສິ່ງທີ່ວ່າດື້ດ້ານທີ່ສຸດ ແລະ ບໍ່ມີສິ່ງໃດທີ່ຈະຍາກໄປກວ່າການຈັດການ ຫຼື ປ່ຽນແປງອຸປະນິໄສທີ່ເສື່ອມຊາມຂອງເນື້ອໜັງ. ຊາຕານກາຍເປັນເນື້ອໜັງຂອງມະນຸດມາເພື່ອກໍ່ກວນຄວາມວຸ້ນວາຍ ແລະ ມັນໃຊ້ເນື້ອໜັງຂອງມະນຸດເພື່ອລົບກວນພາລະກິດຂອງພຣະເຈົ້າ ແລະ ທຳລາຍແຜນການຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງກາຍເປັນຊາຕານ ແລະ ກາຍມາເປັນສັດຕູຂອງພຣະເຈົ້າ. ມະນຸດຈະໄດ້ຮັບຄວາມລອດພົ້ນ, ພວກເຂົາຕ້ອງຖືກເອົາຊະນະກ່ອນ. ມັນເປັນຍ້ອນສິ່ງນີ້ພຣະເຈົ້າຈຶ່ງລຸກຂຶ້ນຮັບເອົາການທ້າທາຍ ແລະ ກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດທີ່ພຣະອົງເຈດຕະນາທີ່ຈະປະຕິບັດ ແລະ ເພື່ອສູ້ຮົບກັບຊາຕານ. ຈຸດປະສົງຂອງພຣະອົງແມ່ນເພື່ອຊ່ວຍໃຫ້ມະນຸດລອດພົ້ນ ຜູ້ທີ່ຖືກເສື່ອມຊາມ ແລະ ເພື່ອເອົາຊະນະ ແລະ ທຳລາຍລ້າງຊາຕານ ຜູ້ເຊິ່ງກະບົດຕໍ່ພຣະອົງ. ພຣະອົງເອົາຊະນະຊາຕານຜ່ານພາລະກິດແຫ່ງການເອົາຊະນະມະນຸດຂອງພຣະອົງ ແລະ ໃນຂະນະດຽວກັນ ພຣະອົງກໍ່ຊ່ວຍມະນຸດຊາດທີ່ເສື່ອມຊາມໃຫ້ລອດພົ້ນ. ສະນັ້ນ ມັນຄືພາລະກິດທີ່ບັນລຸສອງເປົ້າໝາຍໄດ້ພ້ອມກັນ. ພຣະອົງປະຕິບັດພາລະກິດໃນເນື້ອໜັງ, ກ່າວໃນເນື້ອໜັງ ແລະ ຮັບພາລະກິດທັງໝົດທີ່ຢູ່ໃນເນື້ອໜັງເພື່ອເຮັດວຽກກັບມະນຸດ ແລະ ເອົາຊະນະມະນຸດໄດ້ດີຂຶ້ນ. ນີ້ແມ່ນຄັ້ງສຸດທ້າຍທີ່ພຣະເຈົ້າຈະກາຍເປັນເນື້ອໜັງ, ເຊິ່ງພາລະກິດແຫ່ງຍຸກສຸດທ້າຍຂອງພຣະເຈົ້າແມ່ນຈະສິ້ນສຸດລົງໃນເນື້ອໜັງ. ພຣະອົງຈະໄດ້ຈັດແບ່ງມະນຸດທຸກຄົນອອກຕາມປະເພດຂອງພວກເຂົາ, ພຣະອົງຈະສິ້ນສຸດການຄຸ້ມຄອງທັງໝົດຂອງພຣະອົງ ແລະ ສິ້ນສຸດພາລະກິດທັງໝົດຂອງພຣະອົງທີ່ຢູ່ໃນເນື້ອໜັງອີກດ້ວຍ. ຫຼັງຈາກພາລະກິດທັງໝົດທີ່ຢູ່ເທິງແຜ່ນດິນໂລກໄດ້ມາເຖິງຈຸດສິ້ນສຸດ, ພຣະອົງຈະມີໄຊຊະນະຢ່າງສົມບູນ. ການປະຕິບັດພາລະກິດໃນເນື້ອໜັງ, ພຣະເຈົ້າຈະເອົາຊະນະມະນຸດຊາດ ແລະ ຮັບເອົາມະນຸດຊາດໂດຍສົມບູນ. ນີ້ບໍ່ໄດ້ໝາຍຄວາມວ່າ ການຄຸ້ມຄອງທັງໝົດຂອງພຣະອົງຈະມາເຖິງຈຸດສິ້ນສຸດບໍ? ເມື່ອພຣະເຈົ້າສິ້ນສຸດຕໍ່ພາລະກິດໃນເນື້ອໜັງຂອງພຣະອົງ ຫລັງຈາກທີ່ພຣະອົງໄດ້ເອົາຊະນະຊາຕານຢ່າງແທ້ຈິງ ແລະ ໄດ້ຮັບໄຊຊະນະ, ຊາຕານຈະບໍ່ມີໂອກາດທີ່ຈະເຮັດໃຫ້ມະນຸດເສື່ອມຊາມອີກຕໍ່ໄປ. ເຊິ່ງພາລະກິດແຫ່ງການບັງເກີດເປັນມະນຸດຄັ້ງທຳອິດຂອງພຣະເຈົ້າແມ່ນການໄຖ່ບາບ ແລະ ການອະໄພຄວາມຜິດບາບຂອງມະນຸດ. ບັດນີ້ ມັນຄືພາລະກິດແຫ່ງການເອົາຊະນະ ແລະ ການຮັບເອົາມະນຸດຊາດທັງໝົດ ເພື່ອທີ່ວ່າຊາຕານຈະບໍ່ມີຫົນທາງເຮັດພາລະກິດຂອງມັນອີກຕໍ່ໄປ ແລະ ຈະສູນເສຍຢ່າງສົມບູນ ແລະ ພຣະເຈົ້າຈະມີໄຊຊະນະຢ່າງສົມບູນ. ນີ້ແມ່ນພາລະກິດແຫ່ງເນື້ອໜັງ ແລະ ເປັນພາລະກິດທີ່ພຣະເຈົ້າເອງປະຕິບັດ. ເບື້ອງຕົ້ນຂອງພາລະກິດສາມຂັ້ນຕອນຂອງພຣະເຈົ້າຖືກ

ປະຕິບັດໂດຍພຣະວິນຍານໂດຍກົງ ແລະ ບໍ່ແມ່ນໂດຍເນື້ອໜັງ. ເຖິງຢ່າງໃດກໍຕາມ, ພາລະກິດສຸດທ້າຍຂອງພາລະກິດສາມຂັ້ນຕອນຂອງພຣະເຈົ້າແມ່ນຖືກປະຕິບັດໂດຍພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ບໍ່ແມ່ນໂດຍພຣະວິນຍານໂດຍກົງ. ພາລະກິດແຫ່ງການໄຖ່ບາບຂອງຂັ້ນຕອນທີ່ສອງກໍຍັງຖືກປະຕິບັດໂດຍພຣະເຈົ້າທີ່ສະຖິດໃນເນື້ອໜັງ. ທົ່ວພາລະກິດແຫ່ງການຄຸ້ມຄອງທັງໝົດ, ພາລະກິດທີ່ສຳຄັນທີ່ສຸດຄືການຊ່ວຍມະນຸດໃຫ້ລອດພົ້ນຈາກອິດທິພົນຂອງຊາຕານ. ພາລະກິດສຳຄັນແມ່ນການເອົາຊະນະມະນຸດທີ່ເສື່ອມຊາມຢ່າງສົມບູນ, ແລ້ວສຸດທ້າຍກໍຟື້ນຟູຄວາມເຄົາລົບບູຊາອັນດັ້ງເດີມຂອງພຣະເຈົ້າທີ່ຢູ່ໃນໝາກຫົວໃຈຂອງມະນຸດທີ່ຖືກເອົາຊະນະ ແລະ ເຮັດໃຫ້ເຂົາມີຊີວິດທຳມະດາ ເຊິ່ງໝາຍເຖິງ ຊີວິດທຳມະດາແຫ່ງສິ່ງຖືກສ້າງຂອງພຣະເຈົ້າ. ພາລະກິດນີ້ສຳຄັນຫຼາຍ ແລະ ມັນເປັນແກນສຳຄັນຂອງແຜນການຄຸ້ມຄອງ. ໃນພາລະກິດສາມຂັ້ນຕອນແຫ່ງຄວາມລອດພົ້ນ, ພາລະກິດຂັ້ນຕອນທຳອິດທີ່ຢູ່ໃນຍຸກແຫ່ງພຣະບັນຍັດແມ່ນໄກຈາກແກ່ນແທ້ຂອງພາລະກິດແຫ່ງການຄຸ້ມຄອງ; ມັນມີພຽງຮູບລັກສະນະເລັກນ້ອຍຂອງພາລະກິດແຫ່ງຄວາມລອດພົ້ນເທົ່ານັ້ນ ແລະ ບໍ່ແມ່ນການເລີ່ມຕົ້ນພາລະກິດຂອງພຣະເຈົ້າໃນການຊ່ວຍເຫຼືອມະນຸດໃຫ້ລອດພົ້ນຈາກອຳນາດຂອງຊາຕານ. ພາລະກິດຂັ້ນຕອນທຳອິດຖືກປະຕິບັດໂດຍພຣະວິນຍານໂດຍກົງ ນັ້ນຍ້ອນວ່າພາຍໃຕ້ພຣະບັນຍັດ ມະນຸດພຽງແຕ່ຮູ້ປະຕິບັດຕາມພຣະບັນຍັດເທົ່ານັ້ນ ແລະ ມະນຸດບໍ່ມີຄວາມຈິງຫຍັງເລີຍ ແລະ ນັ້ນຍ້ອນວ່າ ພາລະກິດໃນຍຸກແຫ່ງພຣະບັນຍັດບໍ່ໄດ້ກ່ຽວພັນເຖິງການປ່ຽນແປງຕໍ່ອຸປະນິໄສຂອງມະນຸດ ແລ້ວແຮງໄກທີ່ມັນຈະກ່ຽວຂ້ອງກັບພາລະກິດໃນການຊ່ວຍເຫຼືອມະນຸດຈາກອຳນາດຂອງຊາຕານ. ສະນັ້ນ ພຣະວິນຍານຂອງພຣະເຈົ້າຈຶ່ງໄດ້ບັນລຸຂັ້ນຕອນພາລະກິດທີ່ງ່າຍທີ່ສຸດນີ້ ໂດຍບໍ່ກ່ຽວຂ້ອງກັບອຸປະນິໄສທີ່ເສື່ອມຊາມຂອງມະນຸດ. ຂັ້ນຕອນຂອງພາລະກິດນີ້ໄດ້ມີສ່ວນກ່ຽວຂ້ອງພຽງໜ້ອຍດຽວກ່ຽວກັບແກ່ນແທ້ຂອງການຄຸ້ມຄອງ ແລະ ມັນບໍ່ມີຄວາມສຳພັນຫຍັງຫຼາຍກັບພາລະກິດທີ່ເປັນທາງການຂອງຄວາມລອດພົ້ນຂອງມະນຸດ ແລະ ດ້ວຍເຫດນັ້ນ ມັນຈຶ່ງບໍ່ຈຳເປັນທີ່ຈະໃຫ້ພຣະເຈົ້າກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງດ້ວຍຕົວພຣະອົງເອງ. ພາລະກິດທີ່ພຣະວິນຍານປະຕິບັດແມ່ນຊັດແຈ້ງ ແລະ ບໍ່ສາມາດຢັ່ງເຖິງໄດ້ ແລະ ມັນເປັນຕາຢ້ານຫຼາຍ ແລະ ບໍ່ສາມາດເຂົ້າເຖິງໄດ້ໂດຍມະນຸດ; ພຣະວິນຍານບໍ່ເໝາະສົມແກ່ການປະຕິບັດພາລະກິດແຫ່ງຄວາມລອດພົ້ນນັ້ນໂດຍກົງ ແລະ ບໍ່ເໝາະສົມທີ່ຈະສະໜອງຊີວິດໃຫ້ກັບມະນຸດໂດຍກົງ. ສິ່ງທີ່ເໝາະສົມທີ່ສຸດສຳລັບມະນຸດກໍຄືການປ່ຽນແປງພາລະກິດແຫ່ງພຣະວິນຍານເຂົ້າໃນວິທີການທີ່ໃກ້ຊິດກັບມະນຸດ ເຊິ່ງໝາຍຄວາມວ່າ ສິ່ງທີ່ເໝາະສົມທີ່ສຸດສຳລັບມະນຸດແມ່ນການໃຫ້ພຣະເຈົ້າກາຍເປັນບຸກຄົນທີ່ປົກກະຕິ ແລະ ທຳມະດາເພື່ອປະຕິບັດພາລະກິດຂອງພຣະອົງ. ສິ່ງນີ້ຈຶ່ງຈຳເປັນໃຫ້ພຣະເຈົ້າບັງເກີດເປັນມະນຸດເພື່ອແທນທີ່ພຣະວິນຍານໃນພາລະກິດຂອງພຣະອົງ ແລະ ສຳລັບມະນຸດແລ້ວ ວິທີທາງທີ່ພຣະເຈົ້າປະຕິບັດພາລະກິດແມ່ນເໝາະສົມທີ່ສຸດ. ທ່າມກາງພາລະກິດສາມຂັ້ນຕອນເຫຼົ່ານີ້, ສອງຂັ້ນຕອນຖືກປະຕິບັດໂດຍເນື້ອໜັງ ແລະ ສອງຂັ້ນຕອນເຫຼົ່ານີ້ແມ່ນໄລຍະທີ່ສຳຄັນຂອງພາລະກິດແຫ່ງການຄຸ້ມຄອງ. ການບັງເກີດເປັນມະນຸດທັງສອງຄັ້ງແມ່ນເຕີມເຕັມກັນ ແລະ ພວກເຂົາສົ່ງເສີມກັນຢ່າງສົມບູນ. ຂັ້ນຕອນທຳອິດຂອງການບັງເກີດເປັນມະນຸດ

ຂອງພຣະເຈົ້າວາງພື້ນຖານສຳລັບຂັ້ນຕອນທີສອງ ແລະ ສາມາດເວົ້າໄດ້ວ່າ ການບັງເກີດເປັນມະນຸດທັງສອງຄັ້ງຂອງພຣະເຈົ້າປະກອບເປັນໜຶ່ງດຽວກັນທີ່ຄົບຖ້ວນ ແລະ ບໍ່ສາມາດເຂົ້າກັນໄດ້. ພາລະກິດສອງຂັ້ນຕອນຂອງພຣະເຈົ້າຖືກປະຕິບັດໂດຍພຣະເຈົ້າໃນຕົວຕົນທີ່ບັງເກີດເປັນມະນຸດຂອງພຣະອົງຍ້ອນວ່າ ພາລະກິດເຫຼົ່ານັ້ນສຳຄັນຫຼາຍຕໍ່ແຜນການຄຸ້ມຄອງທັງໝົດຂອງພຣະອົງ. ເກືອບເວົ້າໄດ້ວ່າຫາກປາສະຈາກພາລະກິດຂອງການບັງເກີດເປັນມະນຸດສອງຄັ້ງຂອງພຣະເຈົ້າ, ພາລະກິດແຫ່ງການຄຸ້ມຄອງທັງໝົດກໍຈະຖືກເຊົາໃນທີ່ສຸດ ແລະ ພາລະກິດແຫ່ງການຊ່ວຍເຫຼືອມະນຸດໃຫ້ລອດພົ້ນກໍຈະເປັນພຽງການເວົ້າແຕ່ປາກ. ພາລະກິດນີ້ຈະສຳຄັນ ຫຼື ບໍ່ ແມ່ນຂຶ້ນກັບຄວາມຕ້ອງການຂອງມະນຸດຊາດ, ຂຶ້ນກັບຄວາມເປັນຈິງແຫ່ງຄວາມຊົ່ວຊ້າຂອງມະນຸດຊາດ ແລະ ຂຶ້ນກັບຄວາມຮຸນແຮງຂອງຄວາມບໍ່ເຊື່ອຟັງຂອງຊາຕານ ແລະ ການທີ່ມັນລົບກວນພາລະກິດ. ຄົນທີ່ເໝາະສົມສຳລັບໜ້າທີ່ແມ່ນຖືກກຳນົດລ່ວງໜ້າໂດຍທຳມະຊາດຂອງພາລະກິດທີ່ຜູ້ເຮັດວຽກປະຕິບັດ ແລະ ຄວາມສຳຄັນຂອງພາລະກິດນັ້ນ. ເມື່ອເວົ້າເຖິງຄວາມສຳຄັນຂອງພາລະກິດນີ້, ໃນປະເດັນທີ່ວ່າ ວິທີການໃດຂອງພາລະກິດທີ່ຈະຕ້ອງນຳໃຊ້: ພາລະກິດທີ່ພຣະວິນຍານຂອງພຣະເຈົ້າປະຕິບັດໂດຍກົງ ຫຼື ພາລະກິດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດ ຫຼື ພາລະກິດທີ່ປະຕິບັດຜ່ານທາງມະນຸດ, ພາລະກິດທຳອິດທີ່ຈະຖືກຕັດອອກແມ່ນພາລະກິດທີ່ປະຕິບັດຜ່ານທາງມະນຸດ ແລະ ອີງຕາມທຳມະຊາດຂອງພາລະກິດ ແລະ ລະຫວ່າງທຳມະຊາດຂອງພາລະກິດຂອງພຣະວິນຍານກັບພາລະກິດຂອງເນື້ອໜັງ, ໃນທີ່ສຸດ ຈຶ່ງຖືກຕັດສິນວ່າພາລະກິດທີ່ເນື້ອໜັງປະຕິບັດມີປະໂຫຍດສຳລັບມະນຸດຫຼາຍກວ່າພາລະກິດທີ່ພຣະວິນຍານປະຕິບັດໂດຍກົງ ແລະ ມັນມີຂໍ້ດີຫຼາຍກວ່າ. ນີ້ແມ່ນຄວາມຄິດຂອງພຣະເຈົ້າໃນເວລາພຣະອົງຕັດສິນວ່າພາລະກິດຂອງພຣະອົງຈະຖືກປະຕິບັດໂດຍພຣະວິນຍານ ຫຼື ໂດຍເນື້ອໜັງ. ມັນມີຄວາມໝາຍ ແລະ ພື້ນຖານສຳລັບພາລະກິດແຕ່ລະຂັ້ນຕອນ. ພາລະກິດເຫຼົ່ານັ້ນບໍ່ແມ່ນຈິນຕະນາການທີ່ບໍ່ມີພື້ນຖານ ຫຼື ພາລະກິດເຫຼົ່ານັ້ນບໍ່ໄດ້ຖືກປະຕິບັດຕາມອຳເພີໃຈ; ມີສະຕິປັນຍາໃນພາລະກິດເຫຼົ່ານັ້ນຢ່າງແນ່ນອນ. ນັ້ນຄືຄວາມຈິງທີ່ຢູ່ເບື້ອງຫຼັງທັງໝົດໃນພາລະກິດຂອງພຣະເຈົ້າ. ໂດຍສະເພາະແລ້ວ ແຜນການຂອງພຣະເຈົ້າຍິ່ງມີຫຼາຍໃນພາລະກິດທີ່ຍິ່ງໃຫຍ່ດັ່ງກ່າວ ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດພາລະກິດທ່າມກາງມະນຸດດ້ວຍຕົວພຣະອົງເອງ. ສະນັ້ນ ສະຕິປັນຍາຂອງພຣະເຈົ້າ ແລະ ຄວາມເປັນຢູ່ທັງໝົດຂອງພຣະອົງແມ່ນຖືກສະທ້ອນໃນທຸກການກະທຳ, ຄວາມຄິດ ແລະ ແນວຄິດຂອງພຣະອົງ; ນີ້ແມ່ນຄວາມເປັນຢູ່ຂອງພຣະເຈົ້າທີ່ຊັດເຈນ ແລະ ເປັນລະບົບຫຼາຍຂຶ້ນ. ຄວາມຄິດ ແລະ ແນວຄິດທີ່ຫຼັກແຫຼມເຫຼົ່ານີ້ແມ່ນຍາກທີ່ຈະໃຫ້ມະນຸດຈິນຕະນາການ ແລະ ຍາກທີ່ຈະໃຫ້ມະນຸດເຊື່ອ ແລະ ຍິ່ງໄປກວ່ານັ້ນແມ່ນຍາກທີ່ຈະໃຫ້ມະນຸດຮູ້. ພາລະກິດທີ່ມະນຸດປະຕິບັດແມ່ນເກີດຂຶ້ນໂດຍອີງຕາມຫຼັກການທົ່ວໄປ ເຊິ່ງສຳລັບມະນຸດແລ້ວ ມັນເປັນທີ່ພໍໃຈຢ່າງສູງ. ແຕ່ເມື່ອປຽບທຽບກັບພາລະກິດຂອງພຣະເຈົ້າແລ້ວ ແມ່ນມີຄວາມບໍ່ເທົ່າທຽມກັນຫຼາຍເກີນໄປແທ້ໆ; ເຖິງແມ່ນ ການກະທຳຂອງພຣະເຈົ້າຍິ່ງໃຫຍ່ ແລະ ພາລະກິດຂອງພຣະເຈົ້າຢູ່ໃນລະດັບທີ່ໃຫຍ່ຫຼວງ, ເບື້ອງຫຼັງສິ່ງເຫຼົ່ານັ້ນແມ່ນມີຫຼາຍນາທີ ແລະ ແຜນການ ແລະ ການຈັດແຈງຢ່າງຊັດເຈນເຊິ່ງມະນຸດບໍ່ສາມາດຈິນຕະນາການໄດ້. ພາລະກິດແຕ່ລະ

ຂັ້ນຕອນຂອງພຣະອົງບໍ່ພຽງແຕ່ຖືກປະຕິບັດຕາມຫຼັກການເທົ່ານັ້ນ, ແຕ່ຂັ້ນຕອນແຕ່ລະຂັ້ນຍັງມີຫຼາຍສິ່ງທີ່ພາສາມະນຸດບໍ່ສາມາດອະທິບາຍໄດ້ ແລະ ສິ່ງເຫຼົ່ານີ້ເປັນສິ່ງທີ່ມະນຸດບໍ່ສາມາດເຫັນໄດ້. ບໍ່ວ່າມັນເປັນພາລະກິດຂອງພຣະວິນຍານ ຫຼື ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ, ແຕ່ລະພາລະກິດແມ່ນຢູ່ໃນແຜນການພາລະກິດຂອງພຣະອົງ. ພຣະອົງຈະບໍ່ປະຕິບັດພາລະກິດໂດຍບໍ່ມີຫຼັກການ ແລະພຣະອົງບໍ່ປະຕິບັດພາລະກິດທີ່ບໍ່ມີຄວາມໝາຍ. ເມື່ອພຣະວິນຍານປະຕິບັດພາລະກິດໂດຍກົງ ພຣະອົງກໍມີເປົ້າໝາຍຂອງພຣະອົງ ແລະ ເມື່ອພຣະອົງກາຍເປັນມະນຸດ (ເຊິ່ງໝາຍຄວາມວ່າ ເມື່ອພຣະອົງປ່ຽນແປງເປືອກນອກຂອງພຣະອົງ) ເພື່ອປະຕິບັດພາລະກິດ, ພຣະອົງກໍຍິ່ງມີເປົ້າໝາຍຂອງພຣະອົງຫຼາຍຂຶ້ນ. ແລ້ວມີເຫດຜົນຫຍັງອີກພຣະອົງຈຶ່ງພ້ອມປ່ຽນແປງຕົວຕົນຂອງພຣະອົງ? ມີເຫດຜົນຫຍັງອີກພຣະອົງຈຶ່ງພ້ອມກາຍມາເປັນຄົນທີ່ຖືວ່າຕໍ່າຕ້ອຍ ແລະ ຖືກຂົ່ມເຫັງ?

ເມື່ອເວົ້າເຖິງພາລະກິດ, ພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງແມ່ນມີຄວາມໝາຍທີ່ສຸດ ແລະຜູ້ທີ່ຈະເຮັດສຳເລັດພາລະກິດດັ່ງກ່າວ ໃນທີ່ສຸດ ກໍແມ່ນພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ບໍ່ແມ່ນພຣະວິນຍານ. ບາງຄົນເຊື່ອວ່າ ໃນເວລາໃດໜຶ່ງທີ່ບໍ່ຮູ້ຈັກໄດ້ ພຣະເຈົ້າອາດມາເຖິງແຜ່ນດິນໂລກ ແລະໄດ້ປາກົດຕົວຕໍ່ມະນຸດ, ດ້ວຍເຫດນີ້ ພຣະອົງຈະພິພາກສາມະນຸດຊາດທັງປວງດ້ວຍຕົວພຣະອົງເອງ, ທົດສອບພວກເຂົາເທື່ອລະຄົນໂດຍບໍ່ປ່ອຍໃຜໄວ້ຈັກຄົນ. ຄົນທີ່ຄິດແບບນີ້ບໍ່ຮູ້ຈັກຂັ້ນຕອນນີ້ຂອງພາລະກິດແຫ່ງການບັງເກີດເປັນມະນຸດ. ພຣະເຈົ້າບໍ່ພິພາກສາມະນຸດເທື່ອລະຄົນ ແລະ ພຣະອົງບໍ່ທົດສອບມະນຸດເທື່ອລະຄົນ; ການເຮັດແບບນັ້ນຈະບໍ່ແມ່ນພາລະກິດແຫ່ງການພິພາກສາ. ຄວາມເສື່ອມຊາມຂອງມະນຸດຊາດທັງປວງແມ່ນບໍ່ຄືກັນບໍ? ແກ່ນແທ້ຂອງມະນຸດຊາດທັງປວງບໍ່ແມ່ນຄືກັນບໍ? ສິ່ງທີ່ຖືກພິພາກສາແມ່ນແກ່ນແທ້ທີ່ເສື່ອມຊາມຂອງມະນຸດຊາດ, ແກ່ນແທ້ຂອງມະນຸດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ຄວາມບາບທັງໝົດຂອງມະນຸດ. ພຣະເຈົ້າບໍ່ພິພາກສາຂໍ້ຜິດພາດທີ່ເລັກນ້ອຍ ແລະ ບໍ່ສຳຄັນສຳລັບມະນຸດ. ພາລະກິດແຫ່ງການພິພາກສາແມ່ນໃນຮູບແບບເປັນຕົວແທນ ແລະ ມັນບໍ່ໄດ້ຖືກປະຕິບັດເພື່ອໃຫ້ຄົນໃດຄົນໜຶ່ງໂດຍສະເພາະ. ກົງກັນຂ້າມ, ມັນເປັນພາລະກິດທີ່ພິພາກສາຄົນກຸ່ມໜຶ່ງເພື່ອເປັນຕົວແທນໃຫ້ກັບການພິພາກຂອງມະນຸດຊາດທັງປວງ. ເຊັ່ນວ່າ ການປະຕິບັດພາລະກິດຂອງພຣະອົງໃນຄົນກຸ່ມໃດໜຶ່ງດ້ວຍຕົວພຣະອົງເອງ, ພຣະເຈົ້າທີ່ຢູ່ໃນເນື້ອໜັງໃຊ້ພາລະກິດຂອງພຣະອົງເພື່ອເປັນຕົວແທນໃຫ້ກັບພາລະກິດຂອງມະນຸດຊາດທັງປວງ ແລ້ວຫຼັງຈາກນັ້ນພາລະກິດຈຶ່ງຖືກເຜີຍແຜ່ອອກໄປເທື່ອລະໜ້ອຍ. ສິ່ງນີ້ຍັງເປັນລັກສະນະທີ່ພາລະກິດແຫ່ງການພິພາກສາເປັນ. ພຣະເຈົ້າບໍ່ພິພາກສາຄົນບາງປະເພດ ຫຼື ຄົນບາງກຸ່ມ, ແຕ່ພິພາກສາຄວາມບໍ່ຊອບທຳຂອງມະນຸດຊາດທັງໝົດແທນ, ຕົວຢ່າງເຊັ່ນ: ການທີ່ມະນຸດຕໍ່ຕ້ານພຣະເຈົ້າ ຫຼື ການທີ່ມະນຸດບໍ່ເຄົາລົບບູຊາພຣະອົງ ຫຼື ການທີ່ມະນຸດລົບກວນພາລະກິດຂອງພຣະເຈົ້າ ແລະ ອື່ນໆອີກ. ສິ່ງທີ່ຖືກພິພາກສາແມ່ນແກ່ນແທ້ຂອງມະນຸດຊາດທີ່ຕໍ່ຕ້ານພຣະເຈົ້າ ແລະ ພາລະກິດນີ້ແມ່ນພາລະກິດແຫ່ງການເອົາຊະນະໃນຍຸກສຸດທ້າຍ. ພາລະກິດ ແລະ ພຣະທຳຂອງພຣະເຈົ້າທີ່ບັງເກີດເປັນມະນຸດທີ່ມະນຸດເອງໄດ້ເປັນພະຍານ ແມ່ນພາລະກິດແຫ່ງການພິພາກສາຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່ໃນລະຫວ່າງຍຸກສຸດທ້າຍ

ເຊິ່ງຄິດຂຶ້ນໂດຍມະນຸດໃນຍຸກຜ່ານມາ. ພາລະກິດທີ່ກຳລັງຖືກປະຕິບັດໂດຍພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນແມ່ນການພິພາກສາຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່ຢ່າງແນ່ນອນ. ພຣະເຈົ້າທີ່ບັງເກີດເປັນມະນຸດແຫ່ງປັດຈຸບັນແມ່ນພຣະເຈົ້າຜູ້ທີ່ພິພາກສາມະນຸດຊາດທັງປວງໃນລະຫວ່າງຍຸກສຸດທ້າຍ. ເນື້ອໜັງນີ້ ແລະ ພາລະກິດຂອງພຣະອົງ, ພຣະທຳຂອງພຣະອົງ ແລະ ອຸປະນິໄສທັງໝົດຂອງພຣະອົງແມ່ນຄວາມບໍລິບູນຂອງພຣະອົງ. ເຖິງແມ່ນວ່າ ຂອບເຂດຂອງພາລະກິດຂອງພຣະອົງຈະມີຈຳກັດ ແລະ ບໍ່ກ່ຽວພັນເຖິງຈັກກະວານທັງປວງໂດຍກົງ, ແກ່ນແທ້ຂອງພາລະກິດແຫ່ງການພິພາກສາແມ່ນການພິພາກສາມະນຸດຊາດທັງປວງໂດຍກົງ, ມັນບໍ່ແມ່ນສຳລັບເຫັນແກ່ປະຊາຊົນຈີນເທົ່ານັ້ນ ຫຼື ສຳລັບຄົນກຸ່ມນ້ອຍໆ. ໃນລະຫວ່າງພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ, ເຖິງແມ່ນຂອບເຂດຂອງພາລະກິດນີ້ບໍ່ກ່ຽວພັນເຖິງຈັກກະວານທັງປວງ, ແຕ່ມັນກໍເປັນຕົວແທນໃຫ້ກັບພາລະກິດຂອງຈັກກະວານທັງປວງ ແລະ ຫຼັງຈາກທີ່ພຣະອົງສຳເລັດພາລະກິດພາຍໃນຂອບເຂດພາລະກິດຂອງເນື້ອໜັງຂອງພຣະອົງ, ພຣະອົງເອງຈະຂະຫຍາຍພາລະກິດນີ້ໄປທົ່ວຈັກກະວານທັນທີ, ໃນລັກສະນະດຽວກັນນັ້ນກັບຂ່າວປະເສີດຂອງພຣະເຢຊູທີ່ຂະຫຍາຍທົ່ວຈັກກະວານຫຼັງຈາກການຟື້ນຄືນຊີບ ແລະ ການຂຶ້ນສູ່ສະຫວັນຂອງພຣະອົງ. ບໍ່ວ່າຈະເປັນພາລະກິດຂອງພຣະວິນຍານ ຫຼື ພາລະກິດຂອງເນື້ອໜັງ, ມັນກໍເປັນພາລະກິດທີ່ປະຕິບັດພາຍໃນຂອບເຂດຈຳກັດ, ແຕ່ເປັນຕົວແທນໃຫ້ກັບພາລະກິດຂອງຈັກກະວານທັງປວງ. ໃນລະຫວ່າງຍຸກສຸດທ້າຍ, ພຣະເຈົ້າປະຕິບັດພາລະກິດຂອງພຣະອົງໂດຍປາກົດຕົວໃນຕົວຕົນທີ່ບັງເກີດເປັນມະນຸດຂອງພຣະອົງ ແລະ ພຣະເຈົ້າທີ່ຢູ່ໃນເນື້ອໜັງກໍເປັນພຣະເຈົ້າທີ່ພິພາກສາມະນຸດຕໍ່ໜ້າບັນລັງສີຂາວທີ່ຍິ່ງໃຫຍ່. ບໍ່ວ່າພຣະອົງຈະເປັນພຣະວິນຍານ ຫຼື ເນື້ອໜັງ, ພຣະອົງຜູ້ເຊິ່ງປະຕິບັດພາລະກິດແຫ່ງການພິພາກສາກໍເປັນພຣະເຈົ້າທີ່ພິພາກສາມະນຸດຊາດໃນລະຫວ່າງຍຸກສຸດທ້າຍ. ສິ່ງນີ້ແມ່ນຖືກກຳນົດໂດຍອີງຕາມພາລະກິດຂອງພຣະອົງ ແລະ ມັນບໍ່ໄດ້ຖືກກຳນົດຕາມລັກສະນະພາຍນອກຂອງພຣະອົງ ຫຼື ປັດໄຈອື່ນໆອີກຫຼາຍຢ່າງ. ເຖິງແມ່ນມະນຸດມີແນວຄິດກ່ຽວກັບພຣະທຳເຫຼົ່ານີ້, ບໍ່ມີໃຜສາມາດປະຕິເສດຄວາມຈິງຂອງການພິພາກສາຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ແລະ ການເອົາຊະນະມະນຸດທັງປວງ. ບໍ່ວ່າມະນຸດຈະຄິດກ່ຽວກັບສິ່ງນັ້ນແນວໃດກໍຕາມ, ໃນທີ່ສຸດແລ້ວຄວາມຈິງກໍຄືຄວາມຈິງ. ບໍ່ມີໃຜທີ່ສາມາດເວົ້າໄດ້ວ່າ "ພາລະກິດຖືກປະຕິບັດໂດຍພຣະເຈົ້າ, ແຕ່ເນື້ອໜັງບໍ່ແມ່ນພຣະເຈົ້າ". ນີ້ແມ່ນເລື່ອງໄຮ້ສາລະ, ຍ້ອນບໍ່ມີໃຜສາມາດເຮັດໃຫ້ພາລະກິດນີ້ສຳເລັດໄດ້ນອກຈາກພຣະເຈົ້າທີ່ຢູ່ໃນເນື້ອໜັງ. ຍ້ອນພາລະກິດນີ້ຖືກເຮັດໃຫ້ສຳເລັດ, ຫຼັງຈາກພາລະກິດນີ້ພາລະກິດແຫ່ງການພິພາກສາມະນຸດຂອງພຣະເຈົ້າຈະບໍ່ປາກົດຂຶ້ນເປັນຄັ້ງທີສອງ; ພຣະເຈົ້າ ໃນການບັງເກີດເປັນມະນຸດຄັ້ງທີສອງຂອງພຣະອົງ ໄດ້ສຳເລັດພາລະກິດທັງໝົດແຫ່ງການຄຸ້ມຄອງທັງປວງແລ້ວ ແລະ ຈະບໍ່ມີພາລະກິດຂອງພຣະເຈົ້າຂັ້ນຕອນທີສີ່. ເພາະຄົນທີ່ຖືກພິພາກສາແມ່ນມະນຸດ, ມະນຸດທີ່ເກີດຈາກເນື້ອໜັງ ແລະ ໄດ້ຖືກເຮັດໃຫ້ເສື່ອມຊາມ ແລະ ບໍ່ແມ່ນວິນຍານຂອງຊາຕານທີ່ຖືກພິພາກສາໂດຍກົງ, ດ້ວຍເຫດນັ້ນ ພາລະກິດແຫ່ງການພິພາກສາຈຶ່ງບໍ່ຖືກປະຕິບັດໃນໂລກຝ່າຍວິນຍານ, ແຕ່ທ່າມກາງມະນຸດ. ບໍ່ມີໃຜທີ່ເໝາະສົມ ແລະ ມີຄຸນສົມບັດໄປກວ່າພຣະເຈົ້າທີ່ຢູ່ໃນ

ເນື້ອໜັງສຳລັບການປະຕິບັດພາລະກິດແຫ່ງການພິພາກສາຄວາມເສື່ອມຊາມຂອງເນື້ອໜັງຂອງມະນຸດ. ຖ້າການພິພາກສາໄດ້ຖືກປະຕິບັດໂດຍພຣະວິນຍານຂອງພຣະເຈົ້າໂດຍກົງ, ແລ້ວມັນກໍຈະບໍ່ລວມເຖິງທຸກສິ່ງ. ຍິ່ງໄປກວ່ານັ້ນ, ພາລະກິດດັ່ງກ່າວແມ່ນຍາກທີ່ຈະໃຫ້ມະນຸດຍອມຮັບເອົາ, ຍ້ອນພຣະວິນຍານບໍ່ສາມາດມາຢູ່ຕໍ່ໜ້າມະນຸດໄດ້ ແລະ ຍ້ອນເຫດນີ້ ຜົນຈຶ່ງຈະບໍ່ເກີດຂຶ້ນທັນທີ, ແລ້ວແຮງໄກທີ່ມະນຸດຈະສາມາດເບິ່ງເຫັນອຸປະນິໄສທີ່ບໍ່ສາມາດລະເມີດໄດ້ຂອງພຣະເຈົ້າຢ່າງຊັດເຈນຍິ່ງຂຶ້ນ. ຊາຕານສາມາດຖືກເອົາຊະນະໄດ້ຢ່າງສົມບູນ ຖ້າພຣະເຈົ້າທີ່ຢູ່ໃນເນື້ອໜັງພິພາກສາຄວາມເສື່ອມຊາມຂອງມະນຸດຊາດ. ການທີ່ເປັນຄືມະນຸດເຮັດໃຫ້ໄດ້ມີຄວາມເປັນມະນຸດທຳມະດາ, ພຣະເຈົ້າທີ່ຢູ່ໃນເນື້ອໜັງຈຶ່ງສາມາດພິພາກສາຄວາມບໍ່ຊອບທຳຂອງມະນຸດໂດຍກົງໄດ້; ນີ້ແມ່ນສັນຍາລັກຂອງຄວາມບໍລິສຸດໂດຍທຳມະຊາດຂອງພຣະອົງ ແລະ ຄວາມພິເສດຂອງພຣະອົງ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ມີຄຸນສົມບັດ ແລະ ຢູ່ໃນຕຳແໜ່ງທີ່ພິພາກສາມະນຸດ, ຍ້ອນພຣະອົງມີຄວາມຈິງ ແລະ ຄວາມຊອບທຳ ແລະ ດ້ວຍເຫດນັ້ນ ພຣະອົງຈຶ່ງສາມາດພິພາກສາມະນຸດ. ຄົນທີ່ປາສະຈາກຄວາມຈິງ ແລະ ຄວາມຊອບທຳບໍ່ເໝາະສົມທີ່ຈະພິພາກສາຄົນອື່ນ. ຖ້າພາລະກິດນີ້ຖືກປະຕິບັດໂດຍພຣະວິນຍານຂອງພຣະເຈົ້າ, ແລ້ວມັນກໍ່ຈະບໍ່ໄດ້ໝາຍເຖິງໄຊຊະນະເໜືອຊາຕານ. ໂດຍທຳມະຊາດແລ້ວ ພຣະວິນຍານສູງສົ່ງກວ່າມະນຸດ ແລະ ໂດຍທຳມະຊາດແລ້ວ ພຣະວິນຍານຂອງພຣະເຈົ້າບໍລິສຸດ ແລະ ມີໄຊຊະນະເໜືອເນື້ອໜັງ. ຖ້າພຣະວິນຍານປະຕິບັດພາລະກິດນີ້ໂດຍກົງ, ພຣະອົງກໍ່ຈະບໍ່ສາມາດພິພາກສາຄວາມບໍ່ເຊື່ອຟັງທັງໝົດຂອງມະນຸດໄດ້ ແລະ ບໍ່ສາມາດເປີດເຜີຍຄວາມບໍ່ຊອບທຳທັງໝົດຂອງມະນຸດ. ຍ້ອນພາລະກິດແຫ່ງການພິພາກສາຍັງໄດ້ຖືກປະຕິບັດຜ່ານແນວຄິດຂອງມະນຸດທີ່ມີກ່ຽວກັບພຣະເຈົ້າ ແລະ ມະນຸດບໍ່ເຄີຍມີແນວຄິດກ່ຽວກັບພຣະວິນຍານ ແລະ ດ້ວຍເຫດນີ້ ພຣະວິນຍານຈຶ່ງບໍ່ສາມາດເປີດໂປງຄວາມບໍ່ຊອບທຳຂອງມະນຸດໄດ້ດີກວ່າ, ແລ້ວແຮງໄກທີ່ຈະເປີດໂປງຄວາມບໍ່ຊອບທຳດັ່ງກ່າວຢ່າງສົມບູນ. ພຣະເຈົ້າທີ່ບັງເກີດເປັນມະນຸດຄືສັດຕູຂອງທຸກຄົນທີ່ບໍ່ຮູ້ຈັກພຣະອົງ. ຜ່ານການພິພາກສາແນວຄິດຂອງມະນຸດ ແລະ ການຕໍ່ຕ້ານພຣະອົງ, ພຣະອົງເປີດໂປງຄວາມບໍ່ເຊື່ອຟັງທຸກຢ່າງຂອງມະນຸດຊາດ. ຜົນຂອງພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງກໍຊັດເຈນກວ່າພາລະກິດຂອງພຣະວິນຍານ. ດ້ວຍເຫດນັ້ນ, ການພິພາກສາມະນຸດຊາດທັງປວງຈຶ່ງບໍ່ຖືກປະຕິບັດໂດຍພຣະວິນຍານໂດຍກົງ, ແຕ່ເປັນພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ພຣະເຈົ້າທີ່ຢູ່ໃນເນື້ອໜັງສາມາດເຫັນໄດ້ ແລະ ສຳຜັດໄດ້ໂດຍມະນຸດ ແລະ ພຣະເຈົ້າທີ່ຢູ່ໃນເນື້ອໜັງສາມາດເອົາຊະນະມະນຸດນັ້ນໄດ້ຢ່າງສົມບູນ. ໃນຄວາມສຳພັນທີ່ມະນຸດມີກັບພຣະເຈົ້າທີ່ສະຖິດຢູ່ໃນເນື້ອໜັງ, ມະນຸດໄດ້ພັດທະນາຈາກການຮຽນຮູ້ເປັນຄວາມເຊື່ອຟັງ, ຈາກການຂົ່ມເຫັງເປັນການຍອມຮັບ, ຈາກແນວຄິດເປັນຄວາມຮູ້ ແລະ ຈາກການປະຕິເສດເປັນຄວາມຮັກ, ສິ່ງເຫຼົ່ານີ້ແມ່ນຜົນຂອງພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ມະນຸດໄດ້ຮັບການຊ່ວຍເຫຼືອໃຫ້ລອດພົ້ນຜ່ານການຍອມຮັບການພິພາກສາຂອງພຣະອົງເອງເທົ່ານັ້ນ, ມະນຸດພຽງແຕ່ມາຮູ້ຈັກພຣະອົງຜ່ານພຣະທຳຈາກປາກຂອງພຣະອົງເທື່ອລະໜ້ອຍ, ມະນຸດຖືກເອົາຊະນະໂດຍພຣະອົງໃນລະຫວ່າງທີ່ພວກເຂົາຕໍ່ຕ້ານພຣະອົງ ແລະ ເຂົາຮັບເອົາການຈັດກຽມຊີວິດຈາກພຣະອົງ

ໃນລະຫວ່າງການຍອມຮັບເອົາການຕີສອນຈາກພຣະອົງ. ທຸກພາລະກິດນີ້ແມ່ນພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ ແລະ ບໍ່ແມ່ນພາລະກິດຂອງພຣະເຈົ້າທີ່ຢູ່ໃນພຣະວິນຍານ. ພາລະກິດທີ່ປະຕິບັດໂດຍພຣະເຈົ້າຜູ້ບັງເກີດເປັນມະນຸດແມ່ນພາລະກິດທີ່ຍິ່ງໃຫຍ່ທີ່ສຸດ ແລະ ເປັນພາລະກິດທີ່ເລິກເຊິ່ງທີ່ສຸດ ແລະ ສ່ວນສຳຄັນໃນພາລະກິດສາມຂັ້ນຕອນຂອງພຣະເຈົ້າກໍແມ່ນພາລະກິດສອງຂັ້ນຕອນແຫ່ງການບັງເກີດເປັນມະນຸດ. ຄວາມເສື່ອມຊາມທີ່ເລິກເຊິ່ງຂອງມະນຸດແມ່ນອຸປະສັກທີ່ໃຫຍ່ຫຼວງຕໍ່ພາລະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ. ເວົ້າໂດຍສະເພາະແລ້ວ ພາລະກິດທີ່ຖືກປະຕິບັດໃນຜູ້ຄົນແຫ່ງຍຸກສຸດທ້າຍແມ່ນຍາກຫຼາຍ ແລະ ສະພາບແວດລ້ອມກໍໂຫດຮ້າຍ ແລະ ຄວາມສາມາດຂອງຄົນແຕ່ລະປະເພດກໍຕໍ່າພໍສົມຄວນ. ແຕ່ເຖິງຢ່າງນັ້ນກໍຕາມ ໃນຕອນຈົບຂອງພາລະກິດນີ້, ມັນກໍຍັງຈະບັນລຸຜົນຢ່າງຖືກຕ້ອງ ໂດຍບໍ່ມີຂໍ້ບົກຜ່ອງໃດໆ; ນີ້ແມ່ນຜົນຂອງພາລະກິດແຫ່ງເນື້ອໜັງ ແລະ ຜົນນີ້ກໍດົນໃຈຫຼາຍກວ່າພາລະກິດຂອງພຣະວິນຍານ. ພາລະກິດສາມຂັ້ນຕອນຂອງພຣະເຈົ້າຈະຖືກເຮັດໃຫ້ສິ້ນສຸດລົງໃນເນື້ອໜັງ ແລະ ພວກມັນຕ້ອງຖືກເຮັດໃຫ້ສິ້ນສຸດໂດຍພຣະເຈົ້າທີ່ບັງເກີດເປັນມະນຸດ. ພາລະກິດທີ່ສຳຄັນທີ່ສຸດ ແລະ ຈຳເປັນທີ່ສຸດຖືກປະຕິບັດໃນເນື້ອໜັງ ແລະ ຄວາມລອດພົ້ນຂອງມະນຸດຕ້ອງຖືກປະຕິບັດໂດຍພຣະເຈົ້າທີ່ຢູ່ໃນເນື້ອໜັງດ້ວຍຕົວພຣະອົງເອງ. ເຖິງແມ່ນວ່າ ມະນຸດຊາດທັງປວງຮູ້ສຶກວ່າພຣະເຈົ້າທີ່ຢູ່ໃນເນື້ອໜັງເບິ່ງຄືບໍ່ກ່ຽວຂ້ອງກັບມະນຸດ, ໃນຄວາມເປັນຈິງແລ້ວ ເນື້ອໜັງນີ້ແມ່ນກ່ຽວຂ້ອງກັບຊະຕາກຳ ແລະ ການເປັນຢູ່ຂອງມະນຸດຊາດທັງປວງ.

ພາລະກິດທຸກຂັ້ນຕອນຂອງພຣະເຈົ້າແມ່ນຖືກປະຕິບັດເພື່ອມວນມະນຸດຊາດທັງປວງ ແລະ ແນໃສ່ມະນຸດຊາດທັງປວງ. ເຖິງແມ່ນວ່າ ມັນຄືພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງ, ມັນກໍຍັງແນໃສ່ຍັງມະນຸດຊາດທັງປວງ; ພຣະອົງເປັນພຣະເຈົ້າຂອງມວນມະນຸດຊາດ ແລະ ພຣະອົງເປັນພຣະເຈົ້າຂອງສັບພະສິ່ງທີ່ຖືກສ້າງ ແລະ ບໍ່ຖືກສ້າງທັງປວງ. ເຖິງແມ່ນວ່າ ພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງນັ້ນແມ່ນໄດ້ຢູ່ພາຍໃນຂອບເຂດຈຳກັດ ແລະ ເປົ້າໝາຍຂອງພາລະກິດນີ້ກໍຍັງມີຄວາມຈຳກັດເຊັ່ນດຽວກັນ, ແຕ່ວ່າໃນແຕ່ລະຄັ້ງທີ່ພຣະອົງກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດຂອງພຣະອົງ ພຣະອົງກໍເລືອກຕົວແທນທີ່ສູງສຸດໃຫ້ເປັນເປົ້າໝາຍຂອງພາລະກິດຂອງພຣະອົງ; ພຣະອົງບໍ່ເລືອກກຸ່ມຄົນທີ່ທຳມະດາ ແລະ ບໍ່ໂດດເດັ່ນເພື່ອປະຕິບັດພາລະກິດ, ແຕ່ກົງກັນຂ້າມ ພຣະອົງໄດ້ເລືອກກຸ່ມຄົນທີ່ສາມາດເປັນຕົວແທນໃຫ້ກັບພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງໃຫ້ເປັນເປົ້າໝາຍຂອງພາລະກິດຂອງພຣະອົງ. ກຸ່ມຄົນເຫຼົ່ານີ້ຖືກກເລືອກກໍຍ້ອນຂອບເຂດຂອງພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງນັ້ນມີຈຳກັດ ແລະ ຖືກຈັດກຽມໄວ້ໃຫ້ກັບເນື້ອໜັງທີ່ເປັນມະນຸດຂອງພຣະອົງໂດຍສະເພາະ ແລະ ຖືກເລືອກສຳລັບພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງໂດຍສະເພາະ. ການທີ່ພຣະເຈົ້າເລືອກເປົ້າໝາຍຂອງພາລະກິດຂອງພຣະອົງນັ້ນບໍ່ແມ່ນບໍ່ມີຫຼັກການ, ແຕ່ຖືກປະຕິບັດໂດຍອີງຕາມຫຼັກການດັ່ງນີ້: ເປົ້າໝາຍຂອງພາລະກິດຕ້ອງມີປະໂຫຍດຕໍ່ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ ແລະ ຕ້ອງສາມາດເປັນຕົວແທນໃຫ້ກັບມະນຸດຊາດທັງປວງໄດ້. ຕົວຢ່າງເຊັ່ນ ຊາວຢິວນັ້ນສາມາດເປັນຕົວແທນໃຫ້ກັບມະນຸດຊາດທັງປວງໃນການຍອມຮັບການໄຖ່ບາບສ່ວນຕົວຂອງພຣະເຢຊູ ແລະ ຊາວຈີນກໍສາມາດເປັນຕົວແທນ

ໃຫ້ກັບມະນຸດຊາດທັງປວງໄດ້ໃນການຍອມຮັບເອົາໄຊຊະນະສ່ວນຕົວຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ. ຊາວຢິວທີ່ເປັນຕົວແທນໃຫ້ກັບມະນຸດຊາດທັງປວງແມ່ນມີພື້ນຖານ ແລະ ຊາວຈີນທີ່ເປັນຕົວແທນໃຫ້ກັບມະນຸດຊາດທັງປວງກໍໄດ້ມີພື້ນຖານໃນການຍອມຮັບເອົາໄຊຊະນະສ່ວນຕົວຂອງພຣະເຈົ້າ. ບໍ່ມີຫຍັງທີ່ເປີດເຜີຍຄວາມໝາຍຂອງການໄຖ່ບາບໄດ້ຫຼາຍກວ່າພາລະກິດແຫ່ງການໄຖ່ບາບທີ່ປະຕິບັດທ່າມກາງຊາວຢິວ ແລະ ບໍ່ມີຫຍັງທີ່ເປີດເຜີຍຄວາມລະອຽດ ແລະ ຄວາມສຳເລັດຂອງພາລະກິດແຫ່ງການເອົາຊະນະໄດ້ຫຼາຍກວ່າພາລະກິດແຫ່ງການເອົາຊະນະທີ່ກຳລັງຖືກປະຕິບັດທ່າມກາງຊາວຈີນ. ພາລະກິດ ແລະ ພຣະທຳຂອງພຣະເຈົ້າທີ່ບັງເກີດເປັນມະນຸດປາກົດຂຶ້ນໂດຍແນໃສ່ຄົນກຸ່ມນ້ອຍເທົ່ານັ້ນ, ແຕ່ໃນຄວາມເປັນຈິງແລ້ວ ພາລະກິດຂອງພຣະອົງໃນທ່າມກາງກຸ່ມນ້ອຍນີ້ແມ່ນພາລະກິດຂອງຈັກກະວານທັງປວງ ແລະ ພຣະທຳຂອງພຣະອົງກໍແນໃສ່ມະນຸດຊາດທັງປວງ. ຫຼັງຈາກພາລະກິດຝ່າຍເນື້ອໜັງຂອງພຣະອົງມາເຖິງຈຸດສິ້ນສຸດ, ຄົນທີ່ຕິດຕາມພຣະອົງຈະເລີ່ມເຜີຍແຜ່ພາລະກິດທີ່ພຣະອົງປະຕິບັດທ່າມກາງພວກເຂົາ. ສິ່ງດີທີ່ສຸດກ່ຽວກັບພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງກໍຄືການທີ່ພຣະອົງສາມາດປະພຣະທຳ ແລະ ການຕັກເຕືອນທີ່ຖືກຕ້ອງ ແລະ ຄວາມປະສົງທີ່ສະເພາະເຈາະຈົງຂອງພຣະອົງໄວ້ໃຫ້ກັບມະນຸດຊາດຜູ້ທີ່ຕິດຕາມພຣະອົງ, ເພື່ອວ່າຫຼັງຈາກນັ້ນ ຜູ້ທີ່ຕິດຕາມພຣະອົງຈະສາມາດສົ່ງຕໍ່ພາລະກິດທຸກຢ່າງຂອງພຣະອົງທີ່ຢູ່ໃນເນື້ອໜັງ ແລະ ຄວາມປະສົງຂອງພຣະອົງໃຫ້ກັບມວນມະນຸດຊາດຜູ້ທີ່ຍອມຮັບຫົນທາງນີ້ຢ່າງຖືກຕ້ອງ ແລະ ເປັນຮູບປະທຳຫຼາຍຍິ່ງຂຶ້ນ. ມີພຽງແຕ່ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງທ່າມກາງມະນຸດເທົ່ານັ້ນທີ່ເຮັດໃຫ້ຄວາມຈິງແຫ່ງການເປັນຢູ່ຂອງພຣະເຈົ້າ ແລະ ການດຳລົງຊີວິດຢູ່ຮ່ວມກັບມະນຸດສຳເລັດຢ່າງແທ້ຈິງ. ມີພຽງແຕ່ພາລະກິດນີ້ເທົ່ານັ້ນ ທີ່ປະຕິບັດຕາມຄວາມປາຖະໜາຂອງມະນຸດໃນການເບິ່ງໃບໜ້າຂອງພຣະເຈົ້າ, ເປັນພະຍານເຖິງພາລະກິດຂອງພຣະເຈົ້າ ແລະ ໄດ້ຍິນພຣະທຳສ່ວນຕົວຂອງພຣະເຈົ້າ. ພຣະເຈົ້າທີ່ບັງເກີດເປັນມະນຸດນຳຈຸດສິ້ນສຸດມາສູ່ຍຸກທີ່ມະນຸດພຽງແຕ່ໄດ້ເຫັນດ້ານຫຼັງຂອງພຣະເຢໂຮວາເທົ່ານັ້ນ ແລະ ພຣະອົງຍັງສິ້ນສຸດຍຸກທີ່ມະນຸດຊາດເຊື່ອໃນພຣະເຈົ້າທີ່ເລື່ອນລອຍ. ໂດຍສະເພາະແລ້ວ ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດຄັ້ງສຸດທ້າຍໄດ້ນຳມະນຸດຊາດທັງປວງເຂົ້າສູ່ຍຸກທີ່ເປັນຈິງຫຼາຍຂຶ້ນ, ແທ້ຈິງຫຼາຍຂຶ້ນ ແລະ ສວຍງາມຫຼາຍຂຶ້ນ. ພຣະອົງບໍ່ພຽງແຕ່ສິ້ນສຸດຍຸກແຫ່ງພຣະບັນຍັດ ແລະ ລັດທິ, ແຕ່ສິ່ງທີ່ສຳຄັນໄປກວ່ານັ້ນ ພຣະອົງເປີດເຜີຍພຣະເຈົ້າທີ່ເປັນຈິງ ແລະ ທຳມະດາຕໍ່ມະນຸດຊາດ ຜູ້ທີ່ຊອບທຳ ແລະ ບໍລິສຸດ, ຜູ້ທີ່ໄຂພາລະກິດແຫ່ງແຜນການຄຸ້ມຄອງ ແລະ ຜູ້ທີ່ສະແດງຄວາມເລິກລັບ ແລະ ຈຸດໝາຍປາຍທາງຂອງມະນຸດຊາດ, ຜູ້ທີ່ສ້າງມະນຸດຊາດ ແລະ ນຳການສິ້ນສຸດມາສູ່ພາລະກິດແຫ່ງການຄຸ້ມຄອງ ແລະ ຜູ້ທີ່ຍັງລີ້ລັບຢູ່ເປັນເວລາຫຼາຍພັນປີ. ພຣະອົງນຳຍຸກແຫ່ງຄວາມເລື່ອນລອຍມາສູ່ການສິ້ນສຸດຢ່າງບໍລິບູນ, ພຣະອົງໄດ້ສຳເລັດຍຸກທີ່ມະນຸດຊາດທັງປວງປາຖະໜາທີ່ຈະສະແຫວງຫາໃບໜ້າຂອງພຣະເຈົ້າ ແຕ່ບໍ່ສາມາດເຮັດໄດ້, ພຣະອົງສິ້ນສຸດຍຸກທີ່ມະນຸດຊາດທັງປວງໄດ້ຮັບໃຊ້ຊາຕານ ແລະ ພຣະອົງນຳພາມະນຸດຊາດທັງປວງເຂົ້າສູ່ຍຸກໃໝ່ຢ່າງສົມບູນ. ນີ້ລ້ວນແລ້ວແຕ່ແມ່ນຜົນຕາມມາຂອງພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງໂດຍແທນທີ່ພຣະວິນຍານຂອງພຣະເຈົ້າ. ເມື່ອ

ພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງຂອງພຣະອົງ, ຄົນທີ່ຕິດຕາມພຣະອົງກໍ່ບໍ່ສະແຫວງຫາ ແລະ ງົມຫາສິ່ງຕ່າງໆທີ່ເບິ່ງຄືມີຢູ່ຈິງ ແລະ ບໍ່ມີຢູ່ຈິງ ແລະ ພວກເຂົາເຊົາທາຍຄວາມປະສົງຂອງພຣະເຈົ້າທີ່ເລື່ອນລອຍ. ເມື່ອພຣະເຈົ້າຂະຫຍາຍພາລະກິດຂອງພຣະອົງໃນເນື້ອໜັງ, ຄົນທີ່ຕິດຕາມພຣະອົງກໍຈະສົ່ງຕໍ່ພາລະກິດທີ່ພຣະອົງປະຕິບັດໃນເນື້ອໜັງໄປສູ່ທຸກສາສະໜາ ແລະ ນິກາຍ ແລະ ພວກເຂົາຈະສື່ສານພຣະທຳທຸກຂໍ້ຂອງພຣະອົງສູ່ຫູຂອງມະນຸດຊາດທັງປວງ. ທຸກສິ່ງທີ່ຜູ້ຮັບຂ່າວປະເສີດຂອງພຣະອົງໄດ້ຍິນຈະເປັນຄວາມຈິງທີ່ມະນຸດເຫັນ ແລະ ໄດ້ຍິນດ້ວຍຕົນເອງ ແລະ ຈະເປັນຄວາມຈິງ ແລະ ບໍ່ແມ່ນຄວາມເລົ່າລື. ຄວາມຈິງເຫຼົ່ານີ້ແມ່ນຫຼັກຖານທີ່ພຣະອົງເຜີຍແຜ່ພາລະກິດ ແລະ ພວກເຂົາຍັງເປັນເຄື່ອງມືທີ່ພຣະອົງນຳໃຊ້ໃນການເຜີຍແຜ່ຂ່າວປະເສີດ. ຫາກປາສະຈາກການມີຢູ່ຂອງຄວາມຈິງ, ຂ່າວປະເສີດຂອງພຣະອົງຈະບໍ່ເຜີຍແຜ່ທົ່ວບັນດາປະເທດ ແລະ ໄປທຸກແຫ່ງ; ຫາກປາສະຈາກຄວາມຈິງແຕ່ມີພຽງຈິນຕະນາການຂອງມະນຸດ, ພຣະອົງຈະບໍ່ສາມາດປະຕິບັດພາລະກິດແຫ່ງການເອົາຊະນະຈັກກະວານທັງປວງໄດ້ຈັກເທື່ອ. ພຣະວິນຍານແມ່ນຍາກທີ່ຈະເຂົ້າໃຈສຳລັບມະນຸດ ແລະ ມະນຸດບໍ່ສາມາດເຫັນໄດ້ ແລະ ພາລະກິດຂອງພຣະວິນຍານກໍບໍ່ສາມາດປະຖິ້ມຫຼັກຖານ ຫຼື ຄວາມຈິງເພີ່ມເຕີມກ່ຽວກັບພາລະກິດຂອງພຣະເຈົ້າໄວ້ໃຫ້ມະນຸດໄດ້. ມະນຸດຈະບໍ່ເຫັນໃບໜ້າທີ່ແທ້ຈິງຂອງພຣະເຈົ້າຈັກເທື່ອ ແລະ ຈະເຊື່ອໃນພຣະເຈົ້າທີ່ເລື່ອນລອຍທີ່ບໍ່ມີຈິງຢູ່ສະເໝີ. ມະນຸດຈະບໍ່ເຫັນໜ້າຕາຂອງພຣະເຈົ້າຈັກເທື່ອ ຫຼື ມະນຸດຈະບໍ່ໄດ້ຍິນພຣະທຳທີ່ພຣະເຈົ້າກ່າວດ້ວຍຕົນເອງ. ໃນທີ່ສຸດແລ້ວ ຈິນຕະນາການຂອງມະນຸດກໍຄືວ່າງເປົ່າ ແລະ ບໍ່ສາມາດແທນໃບໜ້າທີ່ແທ້ຈິງຂອງພຣະເຈົ້າໄດ້; ອຸປະນິໄສໂດຍທຳມະຊາດຂອງພຣະເຈົ້າ ແລະ ພາລະກິດຂອງພຣະເຈົ້າເອງກໍບໍ່ສາມາດຮຽນແບບໄດ້ໂດຍມະນຸດ. ພຣະເຈົ້າທີ່ບໍ່ສາມາດເຫັນໄດ້ທີ່ຢູ່ໃນສະຫວັນ ແລະ ພາລະກິດຂອງພຣະອົງສາມາດນຳມາເທິງແຜ່ນດິນໂລກໂດຍພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນ ຜູ້ເຊິ່ງປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດດ້ວຍຕົວພຣະອົງເອງ. ນີ້ແມ່ນວິທີທີ່ເໝາະສົມທີ່ສຸດທີ່ພຣະເຈົ້າຈະປາກົດຕໍ່ມະນຸດ ເຊິ່ງມະນຸດເຫັນພຣະເຈົ້າ ແລະ ມາຮູ້ຈັກໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ພຣະເຈົ້າທີ່ບໍ່ໄດ້ບັງເກີດເປັນມະນຸດແມ່ນບໍ່ສາມາດບັນລຸສິ່ງນີ້ໄດ້. ເມື່ອດຳເນີນພາລະກິດຂອງພຣະອົງມາເຖິງຂັ້ນຕອນນີ້, ພາລະກິດຂອງພຣະເຈົ້າກໍ່ໄດ້ບັນລຸຜົນຢ່າງພໍໃຈທີ່ສຸດແລ້ວ ແລະ ຖືວ່າເປັນຄວາມສຳເລັດທີ່ບໍລິບູນ. ພາລະກິດສ່ວນຕົວຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງໄດ້ເຮັດໃຫ້ພາລະກິດເກົ້າສິບເປີເຊັນຂອງການຄຸ້ມຄອງທັງໝົດຂອງພຣະອົງສຳເລັດລົງ. ເນື້ອໜັງນີ້ໄດ້ສະໜອງການເລີ່ມຕົ້ນທີ່ດີກວ່າໃຫ້ກັບພາລະກິດທັງໝົດຂອງພຣະອົງ, ເປັນບົດສະຫຼຸບສຳລັບພາລະກິດທັງໝົດຂອງພຣະອົງ, ປະກາດໃຊ້ພາລະກິດທັງໝົດຂອງພຣະອົງ ແລະ ໄດ້ເສີມເຕີມພາລະກິດທັງໝົດນີ້ຢ່າງທົ່ວເຖິງເປັນຄັ້ງສຸດທ້າຍ. ຕັ້ງແຕ່ນີ້ເປັນຕົ້ນໄປ, ຈະບໍ່ມີພຣະເຈົ້າທີ່ບັງເກີດເປັນມະນຸດອີກເພື່ອປະຕິບັດພາລະກິດຂັ້ນຕອນທີສີ່ຂອງພຣະເຈົ້າ ແລະ ຈະບໍ່ມີພາລະກິດທີ່ມະຫັດສະຈັນຂອງການບັງເກີດເປັນມະນຸດຄັ້ງທີສາມຂອງພຣະເຈົ້າອີກ.

ພາລະກິດແຕ່ລະຂັ້ນຕອນຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງເປັນຕົວແທນໃຫ້ກັບພາລະກິດຂອງພຣະອົງຕະຫຼອດຍຸກ ແລະ ມັນບໍ່ແມ່ນເປັນຕົວແທນໃຫ້ກັບຊ່ວງໄລຍະໃດໜຶ່ງຄືກັບພາລະກິດຂອງ

ມະນຸດ. ດ້ວຍເຫດນັ້ນ ຕອນຈົບຂອງພາລະກິດຂອງການບັງເກີດເປັນມະນຸດຄັ້ງສຸດທ້າຍຂອງພຣະອົງກໍບໍ່ໄດ້ໝາຍຄວາມວ່າ ພາລະກິດຂອງພຣະອົງໄດ້ມາເຖິງຈຸດສິ້ນສຸດຢ່າງບໍລິບູນ, ຍ້ອນວ່າ ພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງແມ່ນເປັນຕົວແທນໝົດທັງຍຸກ ແລະ ບໍ່ພຽງແຕ່ເປັນຕົວແທນໃຫ້ກັບຊ່ວງໄລຍະທີ່ພຣະອົງປະຕິບັດພາລະກິດຂອງພຣະອົງໃນເນື້ອໜັງ. ພຽງແຕ່ວ່າ ພຣະອົງສຳເລັດພາລະກິດຂອງພຣະອົງໝົດທັງຍຸກໃນຊ່ວງເວລາທີ່ພຣະອົງຢູ່ໃນເນື້ອໜັງເທົ່ານັ້ນ, ຫຼັງຈາກນັ້ນ ພາລະກິດຂອງພຣະອົງກໍຈະເຜີຍແຜ່ໄປທົ່ວທຸກແຫ່ງຫົນ. ຫຼັງຈາກທີ່ພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ສຳເລັດພັນທະກິດຂອງພຣະອົງ, ພຣະອົງຈະມອບໝາຍພາລະກິດໃນອະນາຄົດຂອງພຣະອົງໃຫ້ກັບຄົນທີ່ຕິດຕາມພຣະອົງ. ໃນທຳນອງນີ້, ພາລະກິດຂອງພຣະອົງຕະຫຼອດຍຸກຈະຖືກປະຕິບັດຢ່າງຕໍ່ເນື່ອງ. ພາລະກິດໃນຍຸກຂອງການບັງເກີດເປັນມະນຸດຈະຖືວ່າຄົບຖ້ວນກໍຕໍ່ເມື່ອມັນໄດ້ເຜີຍແຜ່ທົ່ວຈັກກະວານທັງປວງ. ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດໄດ້ເລີ່ມຕົ້ນຍຸກໃໝ່ ແລະ ຄົນທີ່ສືບຕໍ່ພາລະກິດຂອງພຣະອົງແມ່ນຄົນພຣະອົງໃຊ້. ພາລະກິດທີ່ມະນຸດປະຕິບັດລ້ວນແລ້ວແຕ່ຢູ່ພາຍໃນພັນທະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງ ແລະ ມັນບໍ່ສາມາດເຮັດເກີນຂອບເຂດນີ້ໄດ້. ຖ້າພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ໄດ້ມາເພື່ອປະຕິບັດພາລະກິດຂອງພຣະອົງ, ມະນຸດກໍ່ຈະບໍ່ສາມາດນຳຍຸກເກົ່າໄປສູ່ຈຸດສິ້ນສຸດໄດ້ ແລະ ຈະບໍ່ສາມາດເລີ່ມຕົ້ນຍຸກໃໝ່ໄດ້. ພາລະກິດທີ່ມະນຸດປະຕິບັດພຽງແຕ່ຢູ່ພາຍໃນຂອບເຂດໜ້າທີ່ຂອງພວກເຂົາ ທີ່ມະນຸດສາມາດເຮັດໄດ້ ແລະ ມັນບໍ່ໄດ້ເປັນຕົວແທນໃຫ້ກັບພາລະກິດຂອງພຣະເຈົ້າ. ມີພຽງແຕ່ພຣະເຈົ້າທີ່ບັງເກີດເປັນມະນຸດເທົ່ານັ້ນທີ່ຈະສາມາດມາເຮັດພາລະກິດທີ່ພຣະອົງຄວນປະຕິບັດໃຫ້ສຳເລັດ ແລະ ນອກຈາກພຣະອົງແລ້ວ ບໍ່ມີໃຜສາມາດປະຕິບັດພາລະກິດນີ້ແທນພຣະອົງໄດ້. ແນ່ນອນ, ສິ່ງທີ່ເຮົາເວົ້າແມ່ນກ່ຽວກັບພາລະກິດແຫ່ງການບັງເກີດເປັນມະນຸດ. ທຳອິດພຣະເຈົ້າທີ່ບັງເກີດເປັນມະນຸດນີ້ດຳເນີນຂັ້ນຕອນທີ່ບໍ່ສອດຄ່ອງກັບແນວຄິດຂອງມະນຸດ ແລ້ວຫຼັງຈາກນັ້ນ ພຣະອົງກໍປະຕິບັດພາລະກິດທີ່ບໍ່ສອດຄ່ອງກັບແນວຄິດຂອງມະນຸດຫຼາຍຂຶ້ນ. ຈຸດປະສົງຂອງພາລະກິດແມ່ນການເອົາຊະນະມະນຸດ. ໃນມຸມມອງໜຶ່ງ, ການບັງເກີດເປັນມະນຸດຂອງພຣະເຈົ້າບໍ່ສອດຄ່ອງກັບແນວຄິດຂອງມະນຸດ, ບວກກັບພຣະອົງປະຕິບັດພາລະກິດທີ່ບໍ່ສອດຄ່ອງກັບແນວຄິດຂອງມະນຸດຫຼາຍຍິ່ງຂຶ້ນ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງມີມຸມມອງທີ່ຕໍ່ຕ້ານພຣະອົງຫຼາຍຍິ່ງຂຶ້ນ. ພຣະອົງພຽງແຕ່ປະຕິບັດພາລະກິດແຫ່ງການເອົາຊະນະທ່າມກາງຜູ້ຄົນທີ່ມີແນວຄິດຕ່າງໆນາໆກ່ຽວກັບພຣະອົງ. ບໍ່ວ່າພວກເຂົາຈະປະຕິບັດຕໍ່ພຣະອົງແນວໃດກໍຕາມ, ທັນທີທີ່ພຣະອົງໄດ້ເຮັດໃຫ້ພັນທະກິດຂອງພຣະອົງສຳເລັດ, ທຸກຄົນຈະຕົກຢູ່ພາຍໃຕ້ອຳນາດຂອງພຣະອົງ. ຄວາມຈິງຂອງພາລະກິດນີ້ບໍ່ພຽງແຕ່ຖືກສະທ້ອນທ່າມກາງຊາວຈີນເທົ່ານັ້ນ, ແຕ່ມັນຍັງເປັນຕົວແທນເຖິງວິທີການເອົາຊະນະມະນຸດຊາດທັງປວງ. ຜົນທີ່ຖືກບັນລຸໃນຜູ້ຄົນເຫຼົ່ານີ້ຄືຕົ້ນທາງໄປສູ່ການບັນລຸຜົນໃນມະນຸດຊາດທັງປວງ ແລະ ຜົນຂອງພາລະກິດທີ່ພຣະອົງປະຕິບັດໃນອະນາຄົດກໍຈະຍິ່ງເຮັດໃຫ້ຜູ້ຄົນເຫຼົ່ານີ້ໄດ້ຮັບຜົນຫຼາຍຂຶ້ນເລື້ອຍໆ. ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງບໍ່ກ່ຽວພັນກັບການປ່າວປະກາດທີ່ຍິ່ງໃຫຍ່ ຫຼື ມັນບໍ່ໄດ້ຖືກຫຸ້ມຫໍ່ດ້ວຍຄວາມບໍ່ຊັດເຈນ. ມັນເປັນຈິງ ແລະ ແທ້ຈິງ ແລະ ມັນເປັນພາລະກິດທີ່ໜຶ່ງ

ບວກໜຶ່ງເທົ່າກັບສອງ. ມັນບໍ່ໄດ້ລີ້ລັບຈາກຄົນໃດຄົນໜຶ່ງ ຫຼື ມັນບໍ່ໄດ້ຫຼອກລວງຄົນໜຶ່ງຄົນໃດ. ສິ່ງທີ່ຜູ້ຄົນເຫັນເປັນສິ່ງທີ່ເປັນຈິງ ແລະ ແທ້ຈິງ ແລະ ສິ່ງທີ່ມະນຸດຮັບເອົາແມ່ນຄວາມຈິງ ແລະ ຄວາມຮູ້ທີ່ເປັນຈິງ. ເມື່ອພາລະກິດສິ້ນສຸດລົງ, ມະນຸດຈະມີຄວາມຮູ້ໃໝ່ກ່ຽວກັບພຣະອົງ ແລະ ຄົນທີ່ສະແຫວງຢ່າງແທ້ຈິງກໍ່ຈະບໍ່ມີແນວຄິດກ່ຽວກັບພຣະອົງອີກຕໍ່ໄປ. ນີ້ບໍ່ແມ່ນພຽງຜົນຂອງພາລະກິດຂອງພຣະອົງມີຕໍ່ຊາວຈີນ, ແຕ່ມັນຍັງເປັນຕົວແທນໃຫ້ກັບພາລະກິດຂອງພຣະອົງໃນການເອົາຊະນະມະນຸດຊາດທັງປວງ, ຍ້ອນບໍ່ມີສິ່ງໃດມີຜົນປະໂຫຍດຕໍ່ພາລະກິດແຫ່ງການເອົາຊະນະມະນຸດຊາດທັງປວງຫຼາຍກວ່າເນື້ອໜັງນີ້ ແລະ ພາລະກິດຂອງເນື້ອໜັງນີ້ ແລະ ທຸກສິ່ງທີ່ກ່ຽວກັບເນື້ອໜັງນີ້. ສິ່ງເຫຼົ່ານັ້ນເປັນປະໂຫຍດຕໍ່ພາລະກິດຂອງພຣະອົງໃນປັດຈຸບັນ ແລະ ເປັນປະໂຫຍດຕໍ່ພາລະກິດຂອງພຣະອົງໃນອະນາຄົດ. ເນື້ອໜັງນີ້ຈະໄດ້ເອົາຊະນະມະນຸດຊາດທັງປວງ ແລະ ຈະຮັບເອົາມະນຸດຊາດທັງປວງ. ບໍ່ມີສິ່ງໃດດີ ກວ່າການເຮັດໃຫ້ມະນຸດຊາດທັງປວງໄດ້ເຫັນພຣະເຈົ້າ ແລະ ເຊື່ອຟັງພຣະເຈົ້າ ແລະ ຮູ້ຈັກພຣະເຈົ້າ. ພາລະກິດທີ່ມະນຸດປະຕິບັດພຽງແຕ່ເປັນຕົວແທນຂອບເຂດທີ່ຈຳກັດເທົ່ານັ້ນ ແລະ ເມື່ອພຣະເຈົ້າປະຕິບັດພາລະກິດຂອງພຣະອົງ ພຣະອົງບໍ່ໄດ້ກ່າວຕໍ່ສະເພາະບຸກຄົນໃດໜຶ່ງ ແຕ່ກ່າວຕໍ່ມະນຸດຊາດທັງປວງ ແລະ ທຸກຄົນທີ່ຍອມຮັບພຣະທຳຂອງພຣະອົງ. ຈຸດຈົບທີ່ພຣະອົງປະກາດແມ່ນຈຸດຈົບຂອງມະນຸດຊາດທັງປວງ, ບໍ່ແມ່ນພຽງຈຸດຈົບຂອງບຸກຄົນໃດໜຶ່ງ. ພຣະອົງບໍ່ປະຕິບັດຢ່າງພິເສດຕໍ່ຄົນໃດຄົນໜຶ່ງ ຫຼື ພຣະອົງບໍ່ຫຼອກລວງຄົນໃດຄົນໜຶ່ງ, ພຣະອົງປະຕິບັດພາລະກິດເພື່ອທຸກຄົນ ແລະ ກ່າວຕໍ່ມະນຸດຊາດທັງປວງ. ສະນັ້ນ ພຣະເຈົ້າທີ່ບັງເກີດເປັນມະນຸດອົງນີ້ຈຶ່ງໄດ້ຈັດມະນຸດຊາດທັງປວງຕາມປະເພດໄວ້ແລ້ວ, ໄດ້ພິພາກສາມະນຸດຊາດທັງປວງແລ້ວ ແລະ ໄດ້ຈັດກຽມຈຸດໝາຍປາຍທາງທີ່ເໝາະສົມສຳລັບມະນຸດຊາດທັງປວງ. ເຖິງແມ່ນວ່າພຣະເຈົ້າພຽງແຕ່ປະຕິບັດພາລະກິດຂອງພຣະອົງໃນປະເທດຈີນ, ໃນຄວາມເປັນຈິງ ພຣະອົງໄດ້ຕັດສິນໃຈກ່ຽວກັບພາລະກິດຂອງຈັກກະວານທັງປວງແລ້ວ. ພຣະອົງບໍ່ສາມາດລໍຖ້າຈົນພາລະກິດຂອງພຣະອົງໄດ້ເຜີຍແຜ່ທ່າມກາງມວນມະນຸດຊາດກ່ອນທີ່ຈະກ່າວຖ້ອຍຄຳຂອງພຣະອົງ ແລະ ຈັດກຽມເທື່ອລະບາດກ້າວ. ນັ້ນຈະບໍ່ຊ້າເກີນໄປບໍ? ບັດນີ້ພຣະອົງສາມາດເຮັດໃຫ້ພາລະກິດໃນອະນາຄົດສຳເລັດກ່ອນລ່ວງໜ້າໄດ້ຢ່າງສົມບູນ. ຍ້ອນຜູ້ທີ່ກຳລັງປະຕິບັດພາລະກິດແມ່ນພຣະເຈົ້າທີ່ຢູ່ໃນເນື້ອໜັງ, ພຣະອົງກຳລັງປະຕິບັດພາລະກິດຢ່າງຫຼວງຫຼາຍພາຍໃນຂອບເຂດທີ່ຈຳກັດ ແລະ ຫຼັງຈາກນັ້ນ ພຣະອົງຈະເຮັດໃຫ້ມະນຸດປະຕິບັດໜ້າທີ່ໆມະນຸດຄວນປະຕິບັດ; ນີ້ແມ່ນຫຼັກການແຫ່ງພາລະກິດຂອງພຣະອົງ. ພຣະອົງພຽງແຕ່ສາມາດດຳລົງຊີວິດກັບມະນຸດໃນເວລາໃດໜຶ່ງ ແລະ ບໍ່ສາມາດຕິດຕາມມະນຸດຈົນພາລະກິດຂອງຍຸກຈະສິ້ນສຸດລົງ. ນັ້ນກໍຍ້ອນວ່າພຣະອົງເປັນພຣະເຈົ້າ ພຣະອົງຈຶ່ງທຳນາຍພາລະກິດໃນອະນາຄົດຂອງພຣະອົງກ່ອນລ່ວງໜ້າໄດ້. ຫຼັງຈາກນັ້ນ, ພຣະອົງຈະຈັດມະນຸດທັງປວງຕາມປະເພດໂດຍພຣະທຳຂອງພຣະອົງ ແລະ ມະນຸດຊາດຈະເຂົ້າສູ່ພາລະກິດຂອງພຣະອົງເທື່ອລະກ້າວຕາມພຣະທຳຂອງພຣະອົງ. ບໍ່ມີໃຜສາມາດຫຼົບໜີໄດ້ ແລະ ທຸກຄົນຕ້ອງປະຕິບັດຕາມສິ່ງນີ້. ສະນັ້ນ, ໃນອະນາຄົດ ຍຸກຈະຖືກນຳພາໂດຍພຣະທຳຂອງພຣະອົງ ແລະ ບໍ່ແມ່ນນຳພາໂດຍພຣະວິນຍານ.

ພາລະກິດຂອງພຣະເຈົ້າທີ່ຢູ່ໃນເນື້ອໜັງຕ້ອງຖືກປະຕິບັດໃນເນື້ອໜັງ. ຖ້າພາລະກິດນັ້ນຖືກປະຕິບັດໂດຍພຣະວິນຍານຂອງພຣະເຈົ້າໂດຍກົງ ມັນກໍຈະບໍ່ເກີດຜົນຫຍັງເລີຍ. ເຖິງແມ່ນວ່າພຣະວິນຍານປະຕິບັດພາລະກິດນັ້ນ, ພາລະກິດກໍຈະບໍ່ມີຄວາມໝາຍທີ່ຍິ່ງໃຫຍ່ເລີຍ ແລະ ໃນທີ່ສຸດກໍຈະບໍ່ດົນໃຈ. ທຸກສິ່ງທີ່ມີຊີວິດຕ້ອງການຢາກຮູ້ວ່າ ພາລະກິດຂອງພຣະຜູ້ສ້າງມີຄວາມໝາຍ ຫຼື ບໍ່ ແລະ ມັນເປັນຕົວແທນໃຫ້ກັບຫຍັງ ແລະ ມັນຖືກປະຕິບັດເພື່ອຫຍັງ ແລະ ພາລະກິດຂອງພຣະເຈົ້າເຕັມໄປດ້ວຍສິດອຳນາດ ແລະ ສະຕິປັນຍາ ຫຼື ບໍ່ ແລະ ມັນມີຄຸນຄ່າ ແລະ ຄວາມໝາຍທີ່ສຸດ ຫຼື ບໍ່. ພາລະກິດທີ່ພຣະອົງປະຕິບັດແມ່ນຖືກປະຕິບັດເພື່ອຄວາມລອດພົ້ນຂອງມະນຸດຊາດທັງປວງ, ເພື່ອເອົາຊະນະຊາຕານ ແລະ ເພື່ອການເປັນພະຍານທ່າມກາງທຸກສິ່ງໃຫ້ກັບພຣະອົງເອງ. ເມື່ອເປັນດັ່ງນັ້ນ, ພາລະກິດທີ່ພຣະອົງປະຕິບັດຕ້ອງມີຄວາມໝາຍຫຼາຍ. ເນື້ອໜັງຂອງມະນຸດຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ມັນຖືກເຮັດໃຫ້ຕາບອດສະໜິດ ແລະ ຖືກທຳລາຍຢ່າງເລິກເຊິ່ງ. ເຫດຜົນທີ່ສຳຄັນທີ່ສຸດວ່າ ເປັນຫຍັງພຣະເຈົ້າຈຶ່ງປະຕິບັດພາລະກິດໃນເນື້ອໜັງດ້ວຍຕົວພຣະອົງເອງ ກໍຍ້ອນວ່າ ເປົ້າໝາຍທີ່ພຣະອົງຈະເຮັດໃຫ້ລອດພົ້ນແມ່ນມະນຸດ ຜູ້ທີ່ເກີດຈາກເນື້ອໜັງ ແລະ ຍ້ອນຊາຕານຍັງເຊື່ອເນື້ອໜັງຂອງມະນຸດເພື່ອລົບກວນພາລະກິດຂອງພຣະເຈົ້າ. ການຕໍ່ສູ້ກັບຊາຕານ ຄວາມຈິງແລ້ວ ຄືພາລະກິດແຫ່ງການເອົາຊະນະມະນຸດ ແລະ ໃນເວລາດຽວກັນ ມະນຸດກໍຍັງເປັນເປົ້າໝາຍຂອງຄວາມລອດພົ້ນຂອງພຣະເຈົ້າ. ໃນທຳນອງນີ້, ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດຈຶ່ງຈຳເປັນຕ້ອງມີ. ຊາຕານເຮັດໃຫ້ເນື້ອໜັງຂອງມະນຸດເສື່ອມຊາມ ແລະ ມະນຸດກາຍເປັນຕົວຕົນຂອງຊາຕານ ແລະ ກາຍເປັນເປົ້າໝາຍທີ່ຈະຖືກພຣະເຈົ້າເອົາຊະນະ. ໃນທຳນອງນີ້, ພາລະກິດແຫ່ງການຕໍ່ສູ້ກັບຊາຕານ ແລະ ການຊ່ວຍເຫຼືອມະນຸດຊາດໃຫ້ພົ້ນຈຶ່ງເກີດຂຶ້ນເທິງແຜ່ນດິນໂລກ ແລະ ພຣະເຈົ້າຕ້ອງກາຍເປັນມະນຸດເພື່ອຕໍ່ສູ້ກັບຊາຕານ. ນີ້ແມ່ນພາລະກິດທີ່ເປັນຈິງທີ່ສຸດ. ເມື່ອພຣະເຈົ້າກຳລັງປະຕິບັດພາລະກິດໃນເນື້ອໜັງ, ຕາມຄວາມຈິງແລ້ວ ພຣະອົງກຳລັງຕໍ່ສູ້ກັບຊາຕານທີ່ຢູ່ໃນເນື້ອໜັງ. ເມື່ອພຣະອົງປະຕິບັດພາລະກິດໃນເນື້ອໜັງ, ພຣະອົງກຳລັງປະຕິບັດພາລະກິດໃນອານາຈັກຝ່າຍວິນຍານ ແລະ ພຣະອົງເຮັດໃຫ້ພາລະກິດທັງໝົດຂອງພຣະອົງໃນອານາຈັກຝ່າຍວິນຍານນັ້ນເປັນຈິງເທິງແຜ່ນດິນໂລກ. ຜູ້ທີ່ຖືກເອົາຊະນະແມ່ນມະນຸດ, ມະນຸດທີ່ບໍ່ເຊື່ອຟັງພຣະອົງ ແລະ ຜູ້ທີ່ຖືກເອົາຊະນະແມ່ນຕົວຕົນຂອງຊາຕານ (ແນ່ນອນ, ນີ້ກໍຍັງແມ່ນມະນຸດ), ຜູ້ທີ່ເປັນສັດຕູກັບພຣະອົງ ແລະ ຜູ້ທີ່ຖືກຊ່ວຍໃຫ້ລອດພົ້ນໃນທີ່ສຸດກໍຍັງແມ່ນມະນຸດ. ດ້ວຍເຫດນີ້, ມັນຍິ່ງຈຳເປັນສຳລັບພຣະເຈົ້າທີ່ຈະກາຍເປັນມະນຸດທີ່ມີຮູບຮ່າງພາຍນອກຂອງສິ່ງຖືກສ້າງ ເພື່ອວ່າພຣະອົງຈະສາມາດຕໍ່ສູ້ກັບຊາຕານຢ່າງແທ້ຈິງ, ເພື່ອເອົາຊະນະມະນຸດຜູ້ທີ່ບໍ່ເຊື່ອຟັງພຣະອົງ ແລະ ມີຮ່າງກາຍທີ່ຄືກັບພຣະອົງ ແລະ ເພື່ອຊ່ວຍເຫຼືອມະນຸດໃຫ້ລອດພົ້ນຜູ້ທີ່ມີຮ່າງກາຍຄືກັບພຣະອົງ ແລະ ຖືກຊາຕານທຳລາຍ. ສັດຕູຂອງພຣະອົງແມ່ນມະນຸດ, ເປົ້າໝາຍແຫ່ງການເອົາຊະນະຂອງພຣະອົງກໍແມ່ນມະນຸດ ແລະ ເປົ້າໝາຍແຫ່ງຄວາມລອດພົ້ນຂອງພຣະອົງກໍແມ່ນມະນຸດຜູ້ທີ່ຖືກພຣະອົງສ້າງ. ສະນັ້ນ ພຣະອົງຕ້ອງກາຍເປັນມະນຸດ ແລະ ດ້ວຍວິທີນີ້ ພາລະກິດຂອງພຣະອົງຈຶ່ງງ່າຍທີ່ສຸດ. ພຣະອົງສາມາດເອົາຊະນະຊາຕານ ແລະ ເອົາຊະນະມະນຸດຊາດ ແລະ ຍິ່ງໄປກວ່ານັ້ນ

ພຣະອົງສາມາດຊ່ວຍເຫຼືອມະນຸດຊາດໃຫ້ພົ້ນ. ເຖິງແມ່ນເນື້ອໜັງນີ້ທຳມະດາ ແລະ ເປັນຈິງ, ພຣະອົງບໍ່ແມ່ນເນື້ອໜັງທີ່ທຳມະດາ ນັ້ນກໍຄື ພຣະອົງບໍ່ແມ່ນເນື້ອໜັງທີ່ເປັນມະນຸດ ແຕ່ເນື້ອໜັງທີ່ເປັນທັງມະນຸດ ແລະ ພຣະເຈົ້າ. ນີ້ຄືຄວາມແຕກຕ່າງລະຫວ່າງພຣະອົງ ແລະ ມະນຸດ ແລະ ມັນເປັນສັນຍາລັກແຫ່ງຕົວຕົນຂອງພຣະເຈົ້າ. ມີພຽງແຕ່ເນື້ອໜັງແບບນີ້ເທົ່ານັ້ນທີ່ສາມາດປະຕິບັດພາລະກິດທີ່ພຣະອົງເຈດຕະນາຈະປະຕິບັດ ແລະ ເຮັດໃຫ້ພັນທະກິດຂອງພຣະເຈົ້າໃນເນື້ອໜັງສຳເລັດໄດ້ ແລະ ເຮັດໃຫ້ພາລະກິດຂອງພຣະອົງສຳເລັດທ່າມກາງມະນຸດ. ຖ້າບໍ່ເປັນແບບນັ້ນ, ພາລະກິດຂອງພຣະອົງທ່າມກາງມະນຸດກໍຈະວ່າງເປົ່າ ແລະ ມີຮອຍດ່າງຕະຫຼອດໄປ. ເຖິງແມ່ນວ່າ ພຣະເຈົ້າສາມາດຕໍ່ສູ້ກັບວິນຍານຂອງຊາຕານ ແລະ ໄດ້ຮັບໄຊຊະນະ, ທຳມະຊາດເດີມຂອງມະນຸດທີ່ເສື່ອມຊາມກໍບໍ່ໄດ້ຖືກແກ້ໄຂຈັກເທື່ອ ແລະ ຄົນທີ່ບໍ່ເຊື່ອຟັງພຣະເຈົ້າ ແລະ ຕໍ່ຕ້ານພຣະອົງບໍ່ສາມາດຕົກຢູ່ພາຍໃຕ້ອຳນາດຂອງພຣະອົງໄດ້ຢ່າງແທ້ຈິງຈັກເທື່ອ ເຊິ່ງໝາຍຄວາມວ່າ ພຣະອົງບໍ່ສາມາດເອົາຊະນະມະນຸດຊາດໄດ້ຈັກເທື່ອ ແລະບໍ່ສາມາດຮັບເອົາມະນຸດຊາດທັງປວງໄດ້ຈັກເທື່ອ. ຖ້າພາລະກິດຂອງພຣະອົງເທິງແຜ່ນດິນໂລກບໍ່ສາມາດເຮັດໃຫ້ສຳເລັດໄດ້, ແລ້ວການຄຸ້ມຄອງຂອງພຣະອົງກໍຈະບໍ່ສິ້ນສຸດຈັກເທື່ອ ແລະ ມະນຸດຊາດທັງໝົດຈະບໍ່ສາມາດເຂົ້າສູ່ການພັກຜ່ອນໄດ້. ຖ້າພຣະເຈົ້າບໍ່ສາມາດເຂົ້າສູ່ການພັກຜ່ອນຮ່ວມກັບສິ່ງຖືກສ້າງທັງປວງຂອງພຣະອົງ, ກໍຈະບໍ່ມີຜົນຕາມມາສຳລັບພາລະກິດແຫ່ງການຄຸ້ມຄອງດັ່ງກ່າວຈັກເທື່ອ ແລະ ສະຫງ່າລາສີຂອງພຣະເຈົ້າກໍຈະຫາຍໄປໃນທີ່ສຸດ. ເຖິງແມ່ນເນື້ອໜັງຂອງພຣະອົງບໍ່ມີສິດອຳນາດ, ພາລະກິດທີ່ພຣະອົງປະຕິບັດກໍໄດ້ບັນລຸຜົນຂອງມັນແລ້ວ. ນີ້ແມ່ນທິດທາງພາລະກິດທີ່ພຣະອົງຫຼີກເວັ້ນບໍ່ໄດ້. ບໍ່ວ່າເນື້ອໜັງຂອງພຣະອົງຈະມີສິດອຳນາດ ຫຼື ບໍ່, ຕາບໃດທີ່ພຣະອົງສາມາດປະຕິບັດພາລະກິດຂອງພຣະເຈົ້າເອງ, ແລ້ວພຣະອົງກໍເປັນພຣະເຈົ້າເອງ. ບໍ່ວ່າເນື້ອໜັງນີ້ຈະທຳມະດາ ແລະປົກກະຕິ ຫຼື ບໍ່, ພຣະອົງສາມາດປະຕິບັດພາລະກິດທີ່ພຣະອົງຄວນເຮັດໄດ້ ກໍ່ຍ້ອນເນື້ອໜັງນີ້ແມ່ນພຣະເຈົ້າ ແລະ ບໍ່ແມ່ນພຽງມະນຸດເທົ່ານັ້ນ. ເຫດຜົນທີ່ເນື້ອໜັງນີ້ສາມາດປະຕິບັດພາລະກິດທີ່ມະນຸດບໍ່ສາມາດເຮັດໄດ້ ກໍ່ຍ້ອນແກ່ນແທ້ຂ້າງໃນຂອງພຣະອົງບໍ່ຄືກັບມະນຸດຄົນໃດ ແລະ ເຫດຜົນທີ່ພຣະອົງສາມາດຊ່ວຍເຫຼືອມະນຸດໃຫ້ລອດພົ້ນໄດ້ແມ່ນຍ້ອນຕົວຕົນຂອງພຣະອົງແຕກຕ່າງຈາກມະນຸດທົ່ວໄປ. ເນື້ອໜັງນີ້ສຳຄັນຫຼາຍຕໍ່ມະນຸດຊາດ ເພາະວ່າພຣະອົງເປັນມະນຸດ ແລະ ຍິ່ງໄປກວ່ານັ້ນ ພຣະອົງເປັນພຣະເຈົ້າ, ເພາະພຣະອົງສາມາດປະຕິບັດພາລະກິດທີ່ມະນຸດປົກກະຕິທີ່ເກີດຈາກເນື້ອໜັງບໍ່ສາມາດເຮັດໄດ້ ແລະ ເພາະວ່າພຣະອົງສາມາດຊ່ວຍມະນຸດໃຫ້ພົ້ນຈາກຄວາມເສື່ອມຊາມ, ມະນຸດຜູ້ທີ່ດຳລົງຊີວິດຢູ່ຮ່ວມກັບພຣະອົງເທິງແຜ່ນດິນໂລກ. ເຖິງແມ່ນພຣະອົງຄ້າຍຄືກັບມະນຸດ, ພຣະເຈົ້າທີ່ບັງເກີດເປັນມະນຸດກໍສຳຄັນຕໍ່ມະນຸດຫຼາຍກວ່າຄົນອື່ນໆທີ່ມີຄຸນຄ່າສູງສົ່ງ, ຍ້ອນວ່າພຣະອົງສາມາດປະຕິບັດພາລະກິດທີ່ພຣະວິນຍານຂອງພຣະເຈົ້າບໍ່ສາມາດປະຕິບັດໄດ້, ສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້ຫຼາຍກວ່າພຣະວິນຍານຂອງພຣະເຈົ້າ ແລະ ສາມາດຮັບເອົາມະນຸດຊາດໄດ້ຢ່າງສົມບູນກວ່າພຣະວິນຍານຂອງພຣະເຈົ້າ. ຜົນຕາມມາກໍຄື ເຖິງແມ່ນເນື້ອໜັງນີ້ທຳມະດາ ແລະ ປົກກະຕິ, ການທີ່ພຣະອົງປະກອບສ່ວນຕໍ່ມະນຸດຊາດ ແລະ ຄວາມໝາຍຂອງພຣະອົງຕໍ່ການຢູ່ລອດຂອງມະນຸດຊາດເຮັດໃຫ້ພຣະອົງມີຄ່າ

ຢ່າງສູງ ແລະ ຄຸນຄ່າ ແລະ ຄວາມໝາຍທີ່ແທ້ຈິງຂອງເນື້ອໜັງນີ້ແມ່ນບໍ່ສາມາດວັດແທກໄດ້ໂດຍມະນຸດ. ເຖິງແມ່ນເນື້ອໜັງນີ້ບໍ່ສາມາດທຳລາຍຊາຕານໂດຍກົງ, ພຣະອົງກໍສາມາດໃຊ້ພາລະກິດຂອງພຣະອົງເພື່ອເອົາຊະນະມະນຸດຊາດ ແລະ ເອົາຊະນະຊາຕານ ແລະ ເຮັດໃຫ້ຊາຕານຕົກຢູ່ພາຍໃຕ້ອຳນາດຂອງພຣະອົງຢ່າງສົມບູນ. ມັນເປັນຍ້ອນພຣະເຈົ້າບັງເກີດເປັນມະນຸດ ພຣະອົງຈຶ່ງສາມາດເອົາຊະນະຊາຕານໄດ້ ແລະ ສາມາດຊ່ວຍເຫຼືອມະນຸດຊາດໃຫ້ລອດພົ້ນ. ພຣະອົງບໍ່ໄດ້ທຳລາຍຊາຕານໂດຍກົງ, ແຕ່ກາຍເປັນເນື້ອໜັງເພື່ອປະຕິບັດພາລະກິດໃນການເອົາຊະນະມະນຸດຊາດແທນ ຜູ້ເຊິ່ງໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ. ດ້ວຍເຫດນີ້, ພຣະອົງຈຶ່ງສາມາດເປັນພະຍານໃຫ້ກັບພຣະອົງເອງໄດ້ດີກວ່າສິ່ງຖືກສ້າງຂຶ້ນຂອງພຣະອົງ ແລະ ພຣະອົງສາມາດຊ່ວຍມະນຸດໃຫ້ລອດພົ້ນຈາກຄວາມເສື່ອມຊາມໄດ້ດີກວ່າ. ການເອົາຊະນະຊາຕານຂອງພຣະເຈົ້າທີ່ບັງເກີດເປັນມະນຸດເປັນພະຍານທີ່ຍິ່ງໃຫຍ່ກວ່າ ແລະ ດົນບັນດານໃຈກວ່າການທີ່ພຣະວິນຍານຂອງພຣະເຈົ້າທຳລາຍຊາຕານໂດຍກົງ. ພຣະເຈົ້າທີ່ຢູ່ໃນເນື້ອໜັງສາມາດຊ່ວຍໃຫ້ມະນຸດຮູ້ຈັກພຣະຜູ້ສ້າງໄດ້ດີກວ່າ ແລະ ສາມາດເປັນພະຍານໃຫ້ກັບພຣະເຈົ້າເອງໃນທ່າມກາງສິ່ງຖືກສ້າງຂອງພຣະອົງໄດ້ດີກວ່າ.

# ແກ່ນແທ້ຂອງເນື້ອໜັງທີ່ພຣະເຈົ້າສະຖິດຢູ່

ພຣະເຈົ້າໃນການບັງເກີດເປັນມະນຸດຄັ້ງທຳອິດຂອງພຣະອົງ ໄດ້ດຳລົງຊີວິດຢູ່ເທິງແຜ່ນດິນໂລກເປັນເວລາສາມສິບສາມປີເຄິ່ງ ແລະ ພຣະອົງປະຕິບັດພັນທະກິດຂອງພຣະອົງເປັນເວລາພຽງແຕ່ສາມປີເຄິ່ງຈາກບັນດາປີເຫຼົ່ານັ້ນ. ທັງໃນໄລຍະເວລາທີ່ພຣະອົງປະຕິບັດພາລະກິດ ແລະ ກ່ອນເວລາທີ່ພຣະອົງເລີ່ມປະຕິບັດພາລະກິດ, ພຣະອົງມີຄວາມເປັນມະນຸດທີ່ທຳມະດາ. ພຣະອົງສະຖິດຢູ່ກັບຄວາມເປັນມະນຸດທີ່ທຳມະດາຂອງພຣະອົງເປັນເວລາສາມສິບສາມປີເຄິ່ງ. ຕະຫຼອດໄລຍະເວລາສາມປີເຄິ່ງສຸດທ້າຍນັ້ນ ພຣະອົງເປີດເຜີຍຕົນເອງວ່າເປັນພຣະເຈົ້າທີ່ບັງເກີດເປັນມະນຸດ. ກ່ອນທີ່ພຣະອົງເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ, ພຣະອົງປາກົດຕົວດ້ວຍຄວາມເປັນມະນຸດທຳມະດາ ແລະ ສາມັນ ໂດຍບໍ່ໄດ້ສະແດງເຄື່ອງໝາຍເຖິງຄວາມເປັນພຣະເຈົ້າຂອງພຣະອົງ ແລະ ພຽງແຕ່ຫຼັງຈາກພຣະອົງເລີ່ມຕົ້ນທີ່ປະຕິບັດພັນທະກິດຂອງພຣະອົງຢ່າງເປັນທາງການ ຄວາມເປັນພຣະເຈົ້າຂອງພຣະອົງຈຶ່ງໄດ້ຖືກເປີດເຜີຍອອກ. ຊີວິດ ແລະ ພາລະກິດຂອງພຣະອົງໃນໄລຍະເວລາຊາວເກົ້າປີທຳອິດສະແດງໃຫ້ເຫັນວ່າ ພຣະອົງເປັນມະນຸດທີ່ແທ້ຈິງ, ເປັນບຸດຂອງມະນຸດ ແລະ ເປັນຮ່າງກາຍທີ່ມີເນື້ອໜັງ, ຍ້ອນພັນທະກິດຂອງພຣະອົງພຽງແຕ່ເລີ່ມຕົ້ນຢ່າງຈິງຈັງຫຼັງຈາກອາຍຸໄດ້ຊາວເກົ້າປີ. “ການບັງເກີດເປັນມະນຸດ” ແມ່ນ ການປາກົດຕົວຂອງພຣະເຈົ້າໃນເນື້ອໜັງ; ພຣະອົງປະຕິບັດພາລະກິດທ່າມກາງມະນຸດຊາດໃນລັກສະນະຂອງເນື້ອໜັງ. ສະນັ້ນ ສຳລັບພຣະເຈົ້າທີ່ຕ້ອງບັງເກີດເປັນມະນຸດ ພຣະອົງຕ້ອງເປັນເນື້ອໜັງກ່ອນ, ເນື້ອໜັງທີ່ມີຄວາມເປັນມະນຸດທີ່ທຳມະດາ; ນີ້ແມ່ນຂໍ້ກຳນົດເບື້ອງຕົ້ນໂດຍພື້ນຖານທີ່ສຸດ. ຕາມຄວາມເປັນຈິງ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນ ພຣະເຈົ້າມີຊີວິດ ແລະ ປະຕິບັດພາລະກິດໃນເນື້ອໜັງ, ພຣະເຈົ້າທີ່ຢູ່ໃນແກ່ນແທ້ຂອງພຣະອົງໄດ້ກາຍມາເປັນເນື້ອໜັງ, ກາຍມາເປັນມະນຸດ. ຊີວິດທີ່ບັງເກີດເປັນມະນຸດ ແລະ ພາລະກິດຂອງພຣະອົງສາມາດແບ່ງອອກເປັນສອງຂັ້ນຕອນ. ຂັ້ນຕອນທີໜຶ່ງແມ່ນຊີວິດທີ່ພຣະອົງມີກ່ອນການປະຕິບັດພັນທະກິດຂອງພຣະອົງ. ພຣະອົງມີຊີວິດໃນຄອບຄົວມະນຸດທີ່ທຳມະດາ, ຢູ່ໃນຄວາມເປັນມະນຸດທີ່ທຳມະດາຢ່າງສິ້ນເຊີງ, ເຊື່ອຟັງສິນທຳທີ່ປົກກະຕິ ແລະ ກົດເກນແຫ່ງຊີວິດມະນຸດ, ມີຄວາມຕ້ອງການແບບມະນຸດປົກກະຕິ (ອາຫານ, ເຄື່ອງນຸ່ງ, ການຫຼັບນອນ, ທີ່ພັກອາໄສ), ມີຄວາມອ່ອນແອແບບມະນຸດປົກກະຕິ ແລະ ມີຄວາມຮູ້ສຶກແບບມະນຸດປົກກະຕິ. ເວົ້າອີກຢ່າງໜຶ່ງກໍຄື ໃນລະຫວ່າງຂັ້ນຕອນທຳອິດນັ້ນ ພຣະອົງບໍ່ໄດ້ດຳລົງຊີວິດຢູ່ໃນຄວາມເປັນມະນຸດທີ່ບໍ່ແມ່ນພຣະເຈົ້າ, ທຳມະດາຢ່າງສິ້ນເຊີງ, ໂດຍມີສ່ວນຮ່ວມໃນທຸກກິດຈະກຳທີ່ປົກກະຕິຂອງມະນຸດ. ຂັ້ນຕອນທີສອງແມ່ນຊີວິດທີ່ພຣະອົງມີຫຼັງຈາກເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ. ພຣະອົງຍັງດຳລົງຢູ່ໃນຄວາມເປັນມະນຸດທີ່ທຳມະດາ ໂດຍມີເປືອກນອກຂອງມະນຸດທຳມະດາ, ບໍ່ໄດ້ສະແດງເຖິງໝາຍສຳຄັນພາຍນອກທີ່ເໜືອທຳມະຊາດ. ແຕ່ພຣະອົງມີຊີວິດເພື່ອຜົນປະໂຫຍດແຫ່ງພັນທະກິດຂອງພຣະອົງແທ້ໆ ແລະ ໃນໄລຍະເວລານັ້ນ ຄວາມເປັນມະນຸດທີ່ທຳມະດາຂອງພຣະອົງມີຢູ່ເພື່ອສະໜັບສະໜູນພາລະກິດທີ່ທຳມະດາແຫ່ງຄວາມເປັນພຣະເຈົ້າຂອງພຣະອົງ

ຢ່າງສິ້ນເຊີງ, ຍ້ອນເວລານັ້ນ ຄວາມເປັນມະນຸດທີ່ທຳມະດາຂອງພຣະອົງໄດ້ເຕີບໃຫຍ່ຈົນເຖິງຈຸດທີ່ສາມາດປະຕິບັດພັນທະກິດຂອງພຣະອົງໄດ້. ສະນັ້ນ ຂັ້ນຕອນທີສອງແຫ່ງຊີວິດຂອງພຣະອົງແມ່ນການປະຕິບັດພັນທະກິດຂອງພຣະອົງໃນຄວາມເປັນມະນຸດທີ່ທຳມະດາຂອງພຣະອົງ, ເມື່ອມັນເປັນຊີວິດທີ່ມີທັງຄວາມເປັນມະນຸດທຳມະດາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນ. ໃນລະຫວ່າງຂັ້ນຕອນທຳອິດຂອງຊີວິດຂອງພຣະອົງ ເຫດຜົນທີ່ເຮັດພຣະອົງມີຊີວິດຢູ່ໃນຄວາມເປັນມະນຸດທີ່ທຳມະດາຢ່າງສິ້ນເຊີງກໍຍ້ອນຄວາມເປັນມະນຸດຂອງພຣະອົງຍັງບໍ່ສາມາດຮັກສາພາລະກິດທີ່ສັກສິດທັງໝົດເທື່ອ, ຍັງບໍ່ເຕີບໃຫຍ່ເທື່ອ; ພຽງແຕ່ຫຼັງຈາກທີ່ຄວາມເປັນມະນຸດຂອງພຣະອົງເຕີບໃຫຍ່ເທົ່ານັ້ນ ຈຶ່ງສາມາດຮັບແບກພັນທະກິດຂອງພຣະອົງ, ພຣະອົງຈຶ່ງສາມາດເລີ່ມຕົ້ນປະຕິບັດພັນທະກິດທີ່ພຣະອົງຄວນປະຕິບັດໄດ້. ຍ້ອນພຣະອົງເປັນເນື້ອໜັງ ພຣະອົງຈຶ່ງຕ້ອງເຕີບໂຕ ແລະ ເຕີບໃຫຍ່, ຂັ້ນຕອນທຳອິດຂອງຊີວິດຂອງພຣະອົງແມ່ນຢູ່ໃນຄວາມເປັນມະນຸດທຳມະດາ, ໃນຂະນະທີ່ຂັ້ນຕອນທີສອງນັ້ນ ຍ້ອນຄວາມເປັນມະນຸດຂອງພຣະອົງສາມາດປະຕິບັດພາລະກິດຂອງພຣະອົງ ແລະ ໄດ້ປະຕິບັດພັນທະກິດຂອງພຣະອົງໄດ້ແລ້ວ, ຊີວິດທີ່ພຣະເຈົ້າທີ່ບັງເກີດເປັນມະນຸດດຳລົງຢູ່ມີໃນລະຫວ່າງພັນທະກິດນີ້ ຈຶ່ງຢູ່ໃນທັງຄວາມເປັນມະນຸດ ແລະ ຄວາມເປັນພຣະເຈົ້າຢ່າງສົມບູນ. ນັບຕັ້ງແຕ່ຊ່ວງເວລາທີ່ພຣະອົງກຳເນີດ ຖ້າພຣະເຈົ້າທີ່ບັງເກີດເປັນມະນຸດເລີ່ມຕົ້ນພັນທະກິດຂອງພຣະອົງຢ່າງຈິງຈັງ ໂດຍປະຕິບັດໝາຍສຳຄັນທີ່ເໜືອທຳມະຊາດ ແລະ ການອັດສະຈັນຕ່າງໆ ແລ້ວພຣະອົງກໍຈະບໍ່ມີແກ່ນແທ້ທາງຮ່າງກາຍ. ສະນັ້ນ ຄວາມເປັນມະນຸດຂອງພຣະເຈົ້າມີຢູ່ກໍເພື່ອເຫັນແກ່ຜົນປະໂຫຍດຂອງທາດແທ້ຝ່າຍຮ່າງກາຍຂອງພຣະອົງ; ບໍ່ມີເນື້ອໜັງໃດທີ່ປາສະຈາກຄວາມເປັນມະນຸດ ແລະ ຄົນທີ່ປາສະຈາກຄວາມເປັນມະນຸດກໍບໍ່ແມ່ນມະນຸດ. ເມື່ອເປັນແບບນີ້ຄວາມເປັນມະນຸດແຫ່ງເນື້ອໜັງຂອງພຣະເຈົ້າຈຶ່ງເປັນຄຸນສົມບັດທາງທຳມະຊາດຂອງເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ. ການເວົ້າວ່າ "ເມື່ອພຣະເຈົ້າກາຍມາເປັນເນື້ອໜັງ ພຣະອົງເປັນສິ່ງສັກສິດຢ່າງສິ້ນເຊີງ ແລະ ບໍ່ແມ່ນມະນຸດເລີຍ" ແມ່ນການໝິ່ນປະໝາດ ຍ້ອນວ່າປະໂຫຍກນີ້ແມ່ນບໍ່ເປັນຈິງ ແລະ ລະເມີດຫຼັກການແຫ່ງການບັງເກີດເປັນມະນຸດ. ແມ່ນແຕ່ຫຼັງຈາກທີ່ພຣະເຈົ້າເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ, ພຣະອົງຍັງດຳລົງຢູ່ດ້ວຍຄວາມເປັນພຣະເຈົ້າຂອງພຣະອົງໃນເປືອກນອກຂອງມະນຸດ ໃນເວລາພຣະອົງປະຕິບັດພາລະກິດຂອງພຣະອົງ; ພຽງແຕ່ວ່າ ໃນເວລານັ້ນຄວາມເປັນມະນຸດຂອງພຣະເຈົ້າຮັບໃຊ້ຈຸດປະສົງຢ່າງດຽວໃນການເຮັດໃຫ້ຄວາມເປັນພຣະເຈົ້າຂອງພຣະອົງປະຕິບັດພາລະກິດໃນເນື້ອໜັງທຳມະດາ. ສະນັ້ນ ຕົວແທນຂອງພາລະກິດກໍຄືຄວາມເປັນພຣະເຈົ້າທີ່ສະຖິດຢູ່ໃນຄວາມເປັນມະນຸດຂອງພຣະອົງ. ມັນແມ່ນຄວາມເປັນພຣະເຈົ້າຂອງພຣະອົງ ບໍ່ແມ່ນຄວາມເປັນມະນຸດຂອງພຣະອົງທີ່ປະຕິບັດພາລະກິດ ແຕ່ຜູ້ປະຕິບັດພາລະກິດແມ່ນເນື້ອໜັງຂອງພຣະອົງ. ໂດຍແກ່ນແທ້ແລ້ວ ພາລະກິດຂອງພຣະອົງແມ່ນຖືກກະທຳໂດຍຄວາມເປັນພຣະເຈົ້າທີ່ສົມບູນຂອງພຣະອົງ ບໍ່ແມ່ນຄວາມເປັນມະນຸດຂອງພຣະອົງ. ແຕ່ຜູ້ທີ່ປະຕິບັດພາລະກິດແມ່ນເນື້ອໜັງຂອງພຣະອົງ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ພຣະອົງເປັນມະນຸດ ແລະ ຍັງເປັນພຣະເຈົ້າ, ຍ້ອນພຣະເຈົ້າກາຍມາເປັນພຣະເຈົ້າທີ່ມີຊີວິດໃນເນື້ອໜັງ, ມີເປືອກນອກຂອງມະນຸດ ແລະ ແກ່ນແທ້

ຂອງມະນຸດ ແຕ່ພ້ອມນັ້ນ ກໍຍັງມີແກ່ນແທ້ຂອງພຣະເຈົ້າອີກດ້ວຍ. ຍ້ອນພຣະອົງເປັນມະນຸດທີ່ມີແກ່ນແທ້ຂອງພຣະເຈົ້າ ພຣະອົງຈຶ່ງຢູ່ເໜືອມະນຸດທຸກຄົນທີ່ຖືກສ້າງຂຶ້ນ, ຢູ່ເໜືອມະນຸດທຸກຄົນທີ່ສາມາດປະຕິບັດພາລະກິດຂອງພຣະເຈົ້າ. ດ້ວຍເຫດນັ້ນ ທ່າມກາງທຸກຄົນທີ່ມີຮ່າງກາຍຂອງມະນຸດຄືກັບພຣະອົງ, ທ່າມກາງທຸກຄົນທີ່ມີຄວາມເປັນມະນຸດ, ມີພຽງແຕ່ພຣະອົງເອງທີ່ເປັນພຣະເຈົ້າທີ່ບັງເກີດເປັນມະນຸດ, ສ່ວນຄົນອື່ນໆແມ່ນເປັນມະນຸດທີ່ຖືກສ້າງຂຶ້ນ. ເຖິງແມ່ນວ່າ ພວກເຂົາທັງໝົດໄດ້ມີຄວາມເປັນມະນຸດແລ້ວ, ມະນຸດທີ່ຖືກສ້າງຂຶ້ນບໍ່ມີສິ່ງໃດນອກຈາກຄວາມເປັນມະນຸດ, ໃນຂະນະດຽວກັນ ພຣະເຈົ້າທີ່ບັງເກີດເປັນມະນຸດນັ້ນແມ່ນແຕກຕ່າງ: ໃນເນື້ອໜັງຂອງພຣະອົງ ພຣະອົງບໍ່ພຽງແຕ່ມີຄວາມເປັນມະນຸດ ແຕ່ທີ່ສຳຄັນກວ່ານັ້ນກໍຄືມີຄວາມເປັນພຣະເຈົ້າ. ຄວາມເປັນມະນຸດຂອງພຣະອົງສາມາດເຫັນໄດ້ຈາກການປາກົດຕົວພາຍນອກຂອງເນື້ອໜັງຂອງພຣະອົງ ແລະ ໃນຊີວິດປະຈຳວັນຂອງພຣະອົງ, ແຕ່ຄວາມເປັນພຣະເຈົ້າຂອງພຣະອົງແມ່ນຍາກທີ່ຈະເຫັນໄດ້. ຍ້ອນຄວາມເປັນພຣະເຈົ້າຂອງພຣະອົງສະແດງອອກພຽງແຕ່ໃນເວລາທີ່ພຣະອົງມີຄວາມເປັນມະນຸດ ແລະ ບໍ່ໄດ້ເໜືອທຳມະຊາດແບບທີ່ມະນຸດໄດ້ຈິນຕະນາການໃຫ້ເປັນ, ໃຫ້ມັນເປັນເລື່ອງທີ່ຍາກທີ່ສຸດສຳລັບມະນຸດຈະເຫັນໄດ້. ເຖິງແມ່ນໃນປັດຈຸບັນ ຜູ້ຄົນແມ່ນຍາກຫຼາຍທີ່ຈະຢັ່ງເຖິງແກ່ນແທ້ອັນແທ້ຈິງຂອງພຣະເຈົ້າທີ່ບັງເກີດເປັນມະນຸດ. ແມ່ນແຕ່ຫຼັງຈາກທີ່ເຮົາໄດ້ກ່າວຢ່າງຍືດຍາວແບບນີ້ ເຮົາຄາດວ່າ ມັນຍັງເປັນສິ່ງທີ່ລຶກລັບຕໍ່ພວກເຈົ້າຫຼາຍຄົນ. ໃນຄວາມເປັນຈິງ ບັນຫານີ້ງ່າຍຫຼາຍ: ຕັ້ງແຕ່ພຣະເຈົ້າກາຍມາເປັນເນື້ອໜັງ, ແກ່ນແທ້ຂອງພຣະອົງແມ່ນການປະສົມປະສານລະຫວ່າງຄວາມເປັນມະນຸດ ແລະ ຄວາມເປັນພຣະເຈົ້າ. ການປະສົມປະສານນີ້ຖືກເອີ້ນວ່າ ພຣະເຈົ້າເອງ, ພຣະເຈົ້າເອງເທິງແຜ່ນດິນໂລກ.

ຊີວິດທີ່ພຣະເຢຊູດຳລົງຢູ່ເທິງແຜ່ນດິນໂລກແມ່ນຊີວິດທຳມະດາຂອງເນື້ອໜັງ. ພຣະອົງດຳລົງຊີວິດໃນຄວາມເປັນມະນຸດທີ່ປົກກະຕິຂອງເນື້ອໜັງຂອງພຣະອົງ. ສິດອຳນາດຂອງພຣະອົງ ນັ້ນກໍຄືການປະຕິບັດພາລະກິດຂອງພຣະອົງ ແລະ ກ່າວພຣະທຳຂອງພຣະອົງ ຫຼື ເພື່ອຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ, ເພື່ອກະທຳສິ່ງທີ່ພິເສດຕ່າງໆບໍ່ໄດ້ເປີດເຜີຍຕົວມັນເອງເປັນສ່ວນໃຫຍ່ ຈົນກະທັ່ງພຣະອົງເລີ່ມຕົ້ນພັນທະກິດຂອງພຣະອົງ. ຊີວິດຂອງພຣະອົງກ່ອນອາຍຸຊາວເກົ້າປີ, ກ່ອນພຣະອົງປະຕິບັດພັນທະກິດຂອງພຣະອົງ ຄືຫຼັກຖານພິສູດໃຫ້ເຫັນຢ່າງພຽງພໍແລ້ວວ່າ ພຣະອົງເປັນພຽງຮ່າງກາຍທີ່ເປັນເນື້ອໜັງທຳມະດາ. ຍ້ອນສິ່ງນີ້ ແລະ ຍ້ອນພຣະອົງຍັງບໍ່ໄດ້ເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ, ຜູ້ຄົນບໍ່ໄດ້ເຫັນສິ່ງສັກສິດໃນຕົວພຣະອົງ, ບໍ່ໄດ້ເຫັນຫຍັງ ນອກຈາກສິ່ງທີ່ເກີນມະນຸດປົກກະຕິ, ນັ້ນກໍຄື ມະນຸດທຳມະດາສາມັນ, ດັ່ງໃນເວລານັ້ນ ມີບາງຄົນເຊື່ອວ່າພຣະອົງເປັນລູກຊາຍຂອງໂຢເຊບ. ຜູ້ຄົນຄິດວ່າ ພຣະອົງເປັນລູກຊາຍຂອງມະນຸດທຳມະດາ ພວກເຂົາບໍ່ມີທາງບອກໄດ້ເລີຍວ່າ ພຣະອົງເປັນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ; ແມ່ນແຕ່ໃນຊ່ວງເວລາການປະຕິບັດພັນທະກິດຂອງພຣະອົງ ພຣະອົງປະຕິບັດສິ່ງອັດສະຈັນຫຼາຍຢ່າງ, ຄົນສ່ວນໃຫຍ່ກໍຍັງເວົ້າວ່າ ພຣະອົງເປັນລູກຊາຍຂອງໂຢເຊບ ຍ້ອນພຣະອົງເປັນພຣະຄຣິດທີ່ມີເປືອກນອກຂອງຄວາມເປັນມະນຸດທຳມະດາ. ຄວາມເປັນມະນຸດທຳມະດາຂອງພຣະອົງ ແລະ ພາລະກິດຂອງພຣະອົງ ທັງສອງສິ່ງນີ້ເກີດຂຶ້ນເພື່ອບັນລຸ

ຄວາມໝາຍຂອງການບັງເກີດເປັນມະນຸດຄັ້ງທຳອິດ ເຊິ່ງພິສູດໃຫ້ເຫັນວ່າ ພຣະເຈົ້າໄດ້ສະຖິດເຂົ້າສູ່ເນື້ອໜັງມະນຸດຢ່າງສົມບູນ ແລະ ກາຍມາເປັນມະນຸດທຳມະດາຢ່າງສິ້ນເຊີງ. ຄວາມເປັນມະນຸດທຳມະດາຂອງພຣະອົງກ່ອນທີ່ພຣະອົງເລີ່ມຕົ້ນປະຕິບັດພາລະກິດຂອງພຣະອົງນັ້ນ ເປັນຫຼັກຖານພິສູດໃຫ້ເຫັນວ່າ ພຣະອົງເປັນເນື້ອໜັງທີ່ທຳມະດາ; ແລະ ຫຼັງຈາກພຣະອົງໄດ້ປະຕິບັດພາລະກິດກໍຍັງພິສູດໃຫ້ເຫັນວ່າພຣະອົງຍັງເປັນມະນຸດທຳມະດາ, ຍ້ອນວ່າພຣະອົງປະຕິບັດໝາຍສຳຄັນ ແລະ ສິ່ງອັດສະຈັນ, ຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍຜ່ານເນື້ອໜັງທີ່ມີຄວາມເປັນມະນຸດທຳມະດາ. ເຫດຜົນທີ່ພຣະອົງສາມາດປະຕິບັດສິ່ງອັດສະຈັນກໍຍ້ອນວ່າ ເນື້ອໜັງຂອງພຣະອົງເກີດຈາກສິດອຳນາດຂອງພຣະເຈົ້າ, ເປັນເນື້ອໜັງທີ່ພຣະວິນຍານຂອງພຣະເຈົ້າສະຖິດຢູ່. ພຣະອົງໄດ້ມີສິດອຳນາດນີ້ກໍຍ້ອນພຣະວິນຍານຂອງພຣະເຈົ້າ ແລະ ມັນບໍ່ໄດ້ໝາຍຄວາມວ່າ ພຣະອົງບໍ່ໄດ້ເປັນເນື້ອໜັງ. ການຮັກສາຄົນປ່ວຍ ແລະ ການຂັບໄລ່ຜີຮ້າຍແມ່ນພາລະກິດທີ່ພຣະອົງຕ້ອງປະຕິບັດໃນພັນທະກິດຂອງພຣະອົງ, ມັນເປັນການສະແດງອອກຂອງຄວາມເປັນພຣະເຈົ້າຂອງພຣະອົງທີ່ເຊື່ອງຊ້ອນຢູ່ໃນຄວາມເປັນມະນຸດຂອງພຣະອົງ ແລະ ບໍ່ວ່າພຣະອົງຈະສະແດງໝາຍສຳຄັນໃດກໍຕາມ ຫຼື ພຣະອົງສະແດງສິດອຳນາດຂອງພຣະອົງແນວໃດກໍຕາມ ພຣະອົງກໍຍັງຢູ່ໃນຄວາມເປັນມະນຸດທຳມະດາ ແລະ ຍັງເປັນເນື້ອໜັງທີ່ທຳມະດາ. ຈົນເຖິງຈຸດທີ່ພຣະອົງຟື້ນຄືນຊີບຫຼັງຈາກທີ່ໄດ້ຕາຍເທິງໄມ້ກາງແຂນ, ພຣະອົງກໍໄດ້ດຳລົງຊີວິດຢູ່ກັບເນື້ອໜັງທຳມະດາ. ການປະທານພຣະຄຸນ, ການຮັກສາຄົນປ່ວຍ ແລະ ການຂັບໄລ່ຜີຮ້າຍທັງໝົດແມ່ນລ້ວນແລ້ວແຕ່ເປັນສ່ວນຂອງພັນທະກິດຂອງພຣະອົງ, ພວກມັນກໍລ້ວນແລ້ວແຕ່ເປັນພາລະກິດທີ່ພຣະອົງປະຕິບັດໃນເນື້ອໜັງທຳມະດາຂອງພຣະອົງ. ກ່ອນທີ່ພຣະອົງຈະໄປທີ່ໄມ້ກາງແຂນ ບໍ່ວ່າພຣະອົງຈະເຮັດຫຍັງກໍຕາມ ພຣະອົງບໍ່ເຄີຍອອກຈາກເນື້ອໜັງມະນຸດທຳມະດາຂອງພຣະອົງເລີຍ. ພຣະອົງເອງເປັນພຣະເຈົ້າ, ປະຕິບັດພາລະກິດຂອງພຣະເຈົ້າເອງ ແຕ່ຍ້ອນພຣະອົງເປັນເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້ານັ້ນ, ພຣະອົງກິນອາຫານ ແລະ ນຸ່ງເສື້ອຜ້າ, ມີຄວາມຕ້ອງການແບບມະນຸດປົກກະຕິ, ມີເຫດຜົນແບບມະນຸດປົກກະຕິ ແລະ ມີຈິດໃຈແບບມະນຸດປົກກະຕິ. ທັງໝົດນີ້ເປັນຫຼັກຖານພິສູດໃຫ້ເຫັນແລ້ວວ່າ ພຣະອົງເປັນມະນຸດທຳມະດາ ເຊິ່ງພິສູດວ່າເນື້ອໜັງບັງເກີດເປັນມະນຸດຂອງພຣະອົງແມ່ນເນື້ອໜັງທີ່ມີຄວາມເປັນມະນຸດທຳມະດາ ແລະ ບໍ່ແມ່ນເນື້ອໜັງທີ່ເໜືອທຳມະຊາດ. ໜ້າທີ່ຂອງພຣະອົງກໍຄືການເຮັດໃຫ້ພາລະກິດຂອງການບັງເກີດເປັນມະນຸດຄັ້ງທຳອິດຂອງພຣະເຈົ້າສຳເລັດລົງ, ເພື່ອສຳເລັດພັນທະກິດຂອງການບັງເກີດເປັນມະນຸດໃນຄັ້ງທຳອິດທີ່ຄວນປະຕິບັດ. ຄວາມໝາຍຂອງການບັງເກີດເປັນມະນຸດກໍຄືມະນຸດທຳມະດາສາມັນ, ປົກກະຕິປະຕິບັດພາລະກິດຂອງພຣະເຈົ້າເອງ; ນັ້ນກໍຄື ພຣະເຈົ້າປະຕິບັດພາລະກິດອັນສັກສິດຂອງພຣະອົງໃນຄວາມເປັນມະນຸດ ແລະ ເອົາຊະນະຊາຕານ. ການບັງເກີດເປັນມະນຸດໝາຍຄວາມວ່າ ພຣະວິນຍານຂອງພຣະເຈົ້າກາຍມາເປັນເນື້ອໜັງ, ນັ້ນກໍຄື ພຣະເຈົ້າກາຍມາເປັນເນື້ອໜັງ; ພາລະກິດທີ່ເນື້ອໜັງປະຕິບັດແມ່ນພາລະກິດແຫ່ງພຣະວິນຍານ ເຊິ່ງກາຍມາເປັນຈິງໃນເນື້ອໜັງ, ສຳແດງອອກຜ່ານເນື້ອໜັງ. ບໍ່ມີໃຜ ນອກຈາກເນື້ອໜັງຂອງພຣະເຈົ້າທີ່ສາມາດເຮັດໃຫ້ພັນທະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດສຳເລັດລົງໄດ້;

ຄືວ່າ ມີພຽງແຕ່ເນື້ອໜັງທີ່ບັງເກີດຈາກພຣະເຈົ້າ, ຄວາມເປັນມະນຸດທຳມະດານີ້ ແລະ ບໍ່ມີສິ່ງອື່ນໃດທີ່ສາມາດສະແດງພາລະກິດອັນສັກສິດໄດ້. ໃນລະຫວ່າງການມາຄັ້ງທຳອິດຂອງພຣະອົງ ຖ້າພຣະເຈົ້າບໍ່ມີຄວາມເປັນມະນຸດທຳມະດາກ່ອນອາຍຸຊາວເກົ້າປີ, ຖ້າທັນທີທີ່ພຣະອົງກຳເນີດ ພຣະອົງສາມາດປະຕິບັດສິ່ງອັດສະຈັນໄດ້, ຖ້າທັນທີທີ່ພຣະອົງຮຽນເວົ້າ ພຣະອົງສາມາດກ່າວພາສາແຫ່ງສະຫວັນໄດ້, ຖ້າຊ່ວງເວລາທີ່ພຣະອົງກ້າວຂາຄັ້ງທຳອິດເທິງແຜ່ນດິນໂລກ ພຣະອົງສາມາດເຂົ້າໃຈທຸກບັນຫາພາຍໃນໂລກ, ແຍກແຍະຄວາມຄິດ ແລະ ເຈດຕະນາຂອງທຸກຄົນອອກ, ບຸກຄົນດັ່ງກ່າວກໍຈະບໍ່ຖືກເອີ້ນວ່າມະນຸດທຳມະດາ ແລະ ເນື້ອໜັງດັ່ງກ່າວກໍຈະບໍ່ຖືກເອີ້ນວ່າ ເນື້ອໜັງຂອງມະນຸດ. ຖ້າສິ່ງນີ້ເປັນຈິງກັບພຣະຄຣິດ ແລ້ວຄວາມໝາຍ ແລະ ແກ່ນແທ້ຂອງການບັງເກີດເປັນມະນຸດຂອງພຣະເຈົ້າກໍຈະສູນເສຍໄປ. ການທີ່ພຣະອົງມີຄວາມເປັນມະນຸດທຳມະດາພິສູດໃຫ້ເຫັນວ່າ ພຣະອົງເປັນພຣະເຈົ້າທີ່ບັງເກີດມະນຸດໃນເນື້ອໜັງ; ຄວາມເປັນຈິງທີ່ພຣະອົງຜ່ານຂະບວນການເຕີບໂຕຂອງມະນຸດທີ່ເປັນປົກກະຕິຍັງສຳແດງໃຫ້ເຫັນອີກວ່າ ພຣະອົງເປັນເນື້ອໜັງທຳມະດາ; ຍິ່ງໄປກວ່ານັ້ນ ພາລະກິດຂອງພຣະອົງກໍເປັນຫຼັກຖານພຽງພໍວ່າ ພຣະອົງຄືພຣະທຳຂອງພຣະເຈົ້າ, ເປັນພຣະວິນຍານຂອງພຣະເຈົ້າທີ່ກາຍມາເປັນເນື້ອໜັງ. ພຣະເຈົ້າກາຍມາເປັນເນື້ອໜັງກໍຍ້ອນຄວາມຕ້ອງການຂອງພາລະກິດຂອງພຣະອົງ; ເວົ້າອີກຢ່າງກໍຄື ຂັ້ນຕອນນີ້ຂອງພາລະກິດຈຳເປັນຕ້ອງໄດ້ເຮັດຜ່ານເນື້ອໜັງ ແລະ ເຮັດຜ່ານໃນຄວາມເປັນມະນຸດທຳມະດາ. ນີ້ແມ່ນເງື່ອນໄຂທີ່ຕ້ອງໃຫ້ມີກ່ອນດຳເນີນພາລະກິດ ສຳລັບ “ພຣະທຳກາຍມາເປັນເນື້ອໜັງ” ແລະ ສຳລັບ “ການປະກົດຂອງພຣະທຳໃນເນື້ອໜັງ” ແລະ ມັນຄືເລື່ອງລາວທີ່ແທ້ຈິງທີ່ຢູ່ເບື້ອງຫຼັງການບັງເກີດເປັນມະນຸດສອງຄັ້ງຂອງພຣະເຈົ້າ. ຜູ້ຄົນອາດເຊື່ອວ່າ ພຣະເຢຊູເຮັດສິ່ງອັດສະຈັນຕະຫຼອດຊີວິດຂອງພຣະອົງ, ພຣະອົງບໍ່ສະແດງໝາຍສຳຄັນຂອງຄວາມເປັນມະນຸດຈົນກວ່າພາລະກິດຂອງພຣະອົງເທິງແຜ່ນດິນໂລກສິ້ນສຸດລົງ, ພຣະອົງບໍ່ໄດ້ມີຄວາມຕ້ອງການແບບມະນຸດປົກກະຕິ ຫຼື ມີຄວາມອ່ອນແອ ຫຼື ຄວາມຮູ້ສຶກແບບມະນຸດ, ບໍ່ຕ້ອງການສິ່ງທີ່ຈຳເປັນພື້ນຖານຂອງຊີວິດ ຫຼື ມີຄວາມຄິດແບບມະນຸດທຳມະດາ. ພວກເຂົາຈິນຕະນາການວ່າພຣະອົງມີພຽງແຕ່ຈິດໃຈທີ່ເໜືອມະນຸດ, ຄວາມເປັນມະນຸດທີ່ເໜືອທຳມະຊາດ. ພວກເຂົາເຊື່ອວ່າ ເນື່ອງຈາກວ່າພຣະອົງເປັນພຣະເຈົ້າ, ພຣະອົງບໍ່ຄວນມີຄວາມຄິດ ແລະ ມີຊີວິດຄືກັບມະນຸດທຳມະດາ, ເຊື່ອວ່າມີພຽງບຸກຄົນທຳມະດາ ທີ່ເປັນມະນຸດແທ້ຈິງເທົ່ານັ້ນທີ່ສາມາດມີຄວາມຄິດແບບມະນຸດປົກກະຕິ ແລະ ມີຊີວິດແບບມະນຸດທຳມະດາ. ສິ່ງເຫຼົ່ານີ້ແມ່ນຄວາມຄິດ ແລະ ແນວຄິດຂອງມະນຸດທັງໝົດ ແລະ ແນວຄິດເຫຼົ່ານີ້ຂັດກັນກັບເຈດຕະນາເດີມຂອງພາລະກິດຂອງພຣະເຈົ້າ. ການຄິດແບບມະນຸດທຳມະດາສະໜັບສະໜູນເຫດຜົນແບບມະນຸດທຳມະດາ ແລະ ຄວາມເປັນມະນຸດທີ່ທຳມະດາ; ຄວາມເປັນມະນຸດທີ່ທຳມະດາສະໜັບສະໜູນໜ້າທີ່ທຳມະດາຂອງເນື້ອໜັງ; ແລະ ໜ້າທີ່ທຳມະດາຂອງເນື້ອໜັງກໍເຮັດໃຫ້ຊີວິດທີ່ທຳມະດາຂອງເນື້ອໜັງຢູ່ໃນຄວາມສົມບູນຂອງເນື້ອໜັງ. ມີພຽງແຕ່ການປະຕິບັດພາລະກິດໃນເນື້ອໜັງດັ່ງກ່າວ ພຣະເຈົ້າຈຶ່ງສາມາດບັນລຸຈຸດປະສົງແຫ່ງການບັງເກີດເປັນມະນຸດຂອງພຣະອົງໄດ້. ຖ້າພຣະເຈົ້າທີ່ບັງເກີດມາເປັນມະນຸດມີພຽງແຕ່ເປືອກນອກຂອງເນື້ອໜັງ ແຕ່ບໍ່ຄິດແບບມະນຸດທຳມະດາ ແລ້ວເນື້ອໜັງນີ້ຈະບໍ່ມີ

ເຫດຜົນຂອງມະນຸດເລີຍ ແຮງໄກທີ່ຈະມີຄວາມເປັນມະນຸດທີ່ແທ້ຈິງ. ເນື້ອໜັງແບບນີ້ ທີ່ປາສະຈາກຄວາມເປັນມະນຸດ ຈະສາມາດສຳເລັດພັນທະກິດທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດຄວນປະຕິບັດໄດ້ແນວໃດ? ຄວາມຄິດທຳມະດາສະໜັບສະໜູນທຸກລັກສະນະຂອງຊີວິດມະນຸດ; ຫາກປາສະຈາກຄວາມຄິດທຳມະດາ ຄົນໜຶ່ງຈະບໍ່ແມ່ນມະນຸດ. ເວົ້າອີກຢ່າງໜຶ່ງກໍຄື ບຸກຄົນທີ່ບໍ່ມີຄວາມຄິດທຳມະດາແມ່ນຄົນທີ່ປ່ວຍທາງຈິດ ແລະ ພຣະຄຣິດທີ່ບໍ່ມີຄວາມເປັນມະນຸດ ມີແຕ່ຄວາມເປັນພຣະເຈົ້າ ແມ່ນບໍ່ສາມາດເວົ້າໄດ້ວ່າເປັນເນື້ອໜັງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ. ແລ້ວເນື້ອໜັງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດຈະສາມາດບໍ່ມີຄວາມເປັນມະນຸດທຳມະດາໄດ້ແນວໃດ? ມັນບໍ່ແມ່ນເປັນການໝິ່ນປະໝາດບໍທີ່ເວົ້າວ່າ ພຣະຄຣິດບໍ່ມີຄວາມເປັນມະນຸດ? ທຸກກິດຈະກຳທີ່ມະນຸດທຳມະດາເຂົ້າຮ່ວມແມ່ນອາໄສແນວຄິດທີ່ເຮັດວຽກປົກກະຕິຂອງມະນຸດ. ຫາກປາສະຈາກສິ່ງນັ້ນ ມະນຸດຈະປະພຶດຕົວຢ່າງຜິດປົກກະຕິ; ພວກເຂົາເຖິງກັບຈະບໍ່ສາມາດບອກຄວາມແຕກຕ່າງລະຫວ່າງສີດຳ ແລະ ສີຂາວ, ດີ ແລະ ຊົ່ວ; ແລະ ພວກເຂົາຈະບໍ່ມີຈັນຍາບັນ ແລະ ຫຼັກສິນທຳຂອງມະນຸດ. ໃນຮູບແບບດຽວກັນ ຖ້າພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ຄິດຄືກັບມະນຸດທຳມະດາ ແລ້ວພຣະອົງຈະບໍ່ແມ່ນເນື້ອໜັງແທ້ຈິງທີ່ເປັນເນື້ອໜັງທຳມະດາ. ເນື້ອໜັງທີ່ບໍ່ມີແນວຄິດດັ່ງກ່າວຈະບໍ່ສາມາດປະຕິບັດພາລະກິດທີ່ສັກສິດໄດ້. ພຣະອົງຈະບໍ່ສາມາດເຂົ້າຮ່ວມໃນກິດຈະກຳຂອງເນື້ອໜັງທີ່ທຳມະດາແຮງໄກທີ່ຈະມີຊີວິດຢູ່ຮ່ວມກັບມະນຸດເທິງແຜ່ນດິນໂລກ. ດ້ວຍເຫດນັ້ນ ຄວາມສຳຄັນຂອງການບັງເກີດເປັນມະນຸດຂອງພຣະເຈົ້າ, ແກ່ນແທ້ຂອງການມາເປັນເນື້ອໜັງຂອງພຣະເຈົ້າ ຈະສູນເສຍໄປ. ຄວາມເປັນມະນຸດຂອງພຣະເຈົ້າທີ່ບັງເກີດເປັນມະນຸດດຳລົງຢູ່ ເພື່ອຮັກສາພາລະກິດສັກສິດທີ່ທຳມະດາຜ່ານເນື້ອໜັງ; ແນວຄິດແບບມະນຸດທຳມະດາຂອງພຣະອົງສະໜັບສະໜູນຄວາມເປັນມະນຸດທຳມະດາຂອງພຣະອົງ ແລະ ທຸກກິດຈະກຳທີ່ທຳມະດາທາງຮ່າງກາຍຂອງພຣະອົງ. ຄົນໆໜຶ່ງສາມາດເວົ້າໄດ້ວ່າ ແນວຄິດແບບມະນຸດຂອງພຣະອົງມີຢູ່ ເພື່ອສະໜັບສະໜູນພາລະກິດທັງໝົດຂອງພຣະເຈົ້າຜ່ານເນື້ອໜັງ. ຖ້າເນື້ອໜັງນີ້ບໍ່ມີແນວຄິດແບບມະນຸດປົກກະຕິ ແລ້ວພຣະເຈົ້າຈະບໍ່ສາມາດປະຕິບັດພາລະກິດຜ່ານເນື້ອໜັງໄດ້ ແລະ ສິ່ງທີ່ພຣະອົງຕ້ອງເຮັດຜ່ານເນື້ອໜັງກໍບໍ່ສາມາດເຮັດໃຫ້ສຳເລັດໄດ້. ເຖິງແມ່ນວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດມີຄວາມຄິດແບບມະນຸດປົກກະຕິ ພາລະກິດຂອງພຣະອົງກໍບໍ່ໄດ້ຖືກເຈືອປົນໂດຍຄວາມຄິດຂອງມະນຸດ; ພຣະອົງປະຕິບັດພາລະກິດໃນຄວາມເປັນມະນຸດໂດຍໃຊ້ຄວາມຄິດທຳມະດາພາຍໃຕ້ເງື່ອນໄຂບັງຄັບທີ່ມີຄວາມເປັນມະນຸດດ້ວຍຄວາມຄິດ ແຕ່ບໍ່ແມ່ນໂດຍການປະຕິບັດຂອງຄວາມຄິດແບບມະນຸດທີ່ທຳມະດາ. ບໍ່ວ່າແນວຄິດຂອງເນື້ອໜັງຂອງພຣະອົງຈະສູງສົ່ງໜ້ອຍຫຼາຍພຽງໃດ ໃນພາລະກິດຂອງພຣະອົງກໍຈະບໍ່ໄດ້ມີມົນທິນໂດຍເຫດຜົນ ຫຼື ການຄິດ. ເວົ້າອີກຢ່າງໜຶ່ງກໍຄື ພາລະກິດຂອງພຣະອົງບໍ່ໄດ້ຄົ້ນຄິດຂຶ້ນຈາກແນວຄິດຂອງເນື້ອໜັງຂອງພຣະອົງ ແຕ່ເປັນການສະແດງອອກໂດຍກົງເຖິງພາລະກິດທີ່ສັກສິດຜ່ານຄວາມເປັນມະນຸດຂອງພຣະເຈົ້າ. ທຸກພາລະກິດແມ່ນພັນທະກິດທີ່ພຣະອົງຕ້ອງເຮັດໃຫ້ສຳເລັດ, ບໍ່ມີສ່ວນໃດເລີຍທີ່ຄົ້ນຄິດຂຶ້ນໂດຍສະໝອງຂອງພຣະອົງ. ຕົວຢ່າງເຊັ່ນການຮັກສາຄົນປ່ວຍ, ການຂັບໄລ່ຜີຮ້າຍ ແລະ ການຖືກຄຶງທີ່ໄມ້ກາງແຂນບໍ່ແມ່ນຜົນຈາກແນວຄິດ

ແບບມະນຸດຂອງພຣະອົງ ແລະ ບໍ່ສາມາດເຮັດສຳເລັດໄດ້ໂດຍມະນຸດຄົນໃດທີ່ມີແນວຄິດແບບມະນຸດ. ໃນຮູບແບບດຽວກັນ ພາລະກິດການເອົາຊະນະໃນປັດຈຸບັນ ແມ່ນພັນທະກິດທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດຕ້ອງປະຕິບັດ, ແຕ່ບໍ່ແມ່ນພາລະກິດແຫ່ງຄວາມປະສົງຂອງມະນຸດ, ເປັນພາລະກິດທີ່ຄວາມເປັນພຣະເຈົ້າຂອງພຣະອົງຄວນປະຕິບັດ ເຊິ່ງເປັນພາລະກິດທີ່ບໍ່ມີມະນຸດທີ່ເປັນເນື້ອໜັງສາມາດເຮັດໄດ້. ສະນັ້ນ ພຣະເຈົ້າຜູ້ບັງເກີດເປັນມະນຸດຕ້ອງມີແນວຄິດແບບມະນຸດທຳມະດາ, ຕ້ອງມີຄວາມເປັນມະນຸດທຳມະດາ, ເພາະພຣະອົງຕ້ອງປະຕິບັດພາລະກິດຂອງພຣະອົງໃນຄວາມເປັນມະນຸດທີ່ມີແນວຄິດທຳມະດາ. ນີ້ຄືແກ່ນແທ້ຂອງພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ, ນັ້ນກໍຄື ແກ່ນແທ້ຈິງຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ.

ກ່ອນທີ່ພຣະເຢຊູປະຕິບັດພາລະກິດ ພຣະອົງມີພຽງແຕ່ອາໄສຢູ່ໃນຄວາມເປັນມະນຸດທຳມະດາຂອງພຣະອົງ. ບໍ່ມີໃຜສາມາດບອກໄດ້ວ່າ ພຣະອົງເປັນພຣະເຈົ້າ, ບໍ່ມີໃຜຄົ້ນພົບວ່າ ພຣະອົງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ; ຜູ້ຄົນພຽງແຕ່ຮູ້ຈັກພຣະອົງໃນຖານະທີ່ເປັນມະນຸດທຳມະດາໂດຍສົມບູນແບບຄົນໜຶ່ງ. ຄວາມເປັນມະນຸດທຳມະດາທີ່ບໍ່ມີຫຍັງພິເສດຢ່າງສິ້ນເຊີງຂອງພຣະອົງເປັນເຄື່ອງພິສູດວ່າ ພຣະເຈົ້າບັງເກີດເປັນເນື້ອໜັງ ແລະ ຍຸກແຫ່ງພຣະຄຸນແມ່ນຍຸກແຫ່ງພາລະກິດຂອງພຣະເຈົ້າຜູ້ບັງເກີດເປັນມະນຸດ, ບໍ່ໄດ້ແມ່ນຍຸກແຫ່ງພາລະກິດຂອງພຣະວິນຍານ. ເຊິ່ງມັນເປັນເຄື່ອງພິສູດວ່າພຣະວິນຍານຂອງພຣະເຈົ້າຖືກເຮັດໃຫ້ເປັນຈິງໃນເນື້ອໜັງມະນຸດຢ່າງສົມບູນ, ໃນຍຸກແຫ່ງການບັງເກີດເປັນມະນຸດຂອງພຣະເຈົ້າ ເນື້ອໜັງຂອງພຣະອົງຈະປະຕິບັດພາລະກິດທັງໝົດຂອງພຣະວິນຍານ. ພຣະຄຣິດທີ່ມີຄວາມເປັນມະນຸດທຳມະດາແມ່ນເນື້ອໜັງທີ່ພຣະວິນຍານເຮັດໃຫ້ເກີດເປັນຈິງ, ເຊິ່ງມີຄວາມເປັນມະນຸດທຳມະດາ, ຄວາມຮູ້ສຶກທີ່ທຳມະດາ ແລະ ຄວາມຄິດແບບມະນຸດ. “ການເຮັດໃຫ້ເກີດເປັນຈິງ” ໝາຍເຖິງພຣະເຈົ້າກາຍມາເປັນມະນຸດ ພຣະວິນຍານກາຍມາເປັນເນື້ອໜັງ; ເວົ້າງ່າຍໆກໍຄື ເມື່ອພຣະເຈົ້າເອງສະຖິດໃນເນື້ອໜັງໂດຍມີຄວາມເປັນມະນຸດທຳມະດາ ແລະ ສະແດງພາລະກິດທີ່ສັກສິດຂອງພຣະອົງຜ່ານສິ່ງນັ້ນ, ນີ້ຄືຄວາມໝາຍຂອງການເຮັດໃຫ້ເກີດເປັນຈິງ ຫຼື ການບັງເກີດເປັນມະນຸດ. ໃນລະຫວ່າງການບັງເກີດເປັນມະນຸດຄັ້ງທຳອິດ ມັນຈຳເປັນສຳລັບພຣະເຈົ້າທີ່ຈະຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ຍ້ອນພາລະກິດຂອງພຣະອົງແມ່ນການໄຖ່ບາບ. ເພື່ອໄຖ່ບາບໃຫ້ມະນຸດຊາດທັງໝົດ ພຣະອົງຕ້ອງມີຄວາມຮັກກະລຸນາ ແລະ ການໃຫ້ອະໄພ. ພາລະກິດທີ່ພຣະອົງປະຕິບັດກ່ອນທີ່ພຣະອົງຈະຖືກຄຶງໃສ່ໄມ້ກາງແຂນແມ່ນການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ ເຊິ່ງໄດ້ສະແດງເຖິງຄວາມລອດພົ້ນຂອງມະນຸດຈາກຄວາມບາບ ແລະ ຄວາມສົກກະປົກ. ຍ້ອນວ່າ ມັນເປັນຍຸກແຫ່ງພຣະຄຸນ, ມັນຈຶ່ງຈຳເປັນທີ່ພຣະອົງຈະຮັກສາຄົນປ່ວຍ ແລ້ວສະແດງໝາຍສຳຄັນ ແລະ ສິ່ງອັດສະຈັນ, ເຊິ່ງເປັນຕົວແທນຂອງພຣະຄຸນໃນຍຸກນັ້ນ; ຍ້ອນວ່າຍຸກແຫ່ງພຣະຄຸນແມ່ນແນໃສ່ໃນການປະທານພຣະຄຸນ, ເປັນສັນຍາລັກແຫ່ງຄວາມສະຫງົບສຸກ, ຄວາມຊື່ນຊົມຍິນດີ ແລະ ການໃຫ້ພອນທາງວັດຖຸ, ຄວາມເຊື່ອຂອງຄົນທຸກຮູບແບບໃນພຣະເຢຊູ. ນັ້ນເວົ້າໄດ້ວ່າ ການຮັກສາຄົນປ່ວຍ, ການຂັບໄລ່ຜີຮ້າຍ ແລະ ການປະທານພຣະຄຸນແມ່ນຄວາມສາມາດຕາມສັນຊາດຕະຍານຂອງເນື້ອໜັງຂອງພຣະເຢຊູໃນ

ຍຸກແຫ່ງພຣະຄຸນ, ສິ່ງເຫຼົ່ານັ້ນເປັນພາລະກິດທີ່ພຣະວິນຍານເຮັດໃຫ້ເກີດເປັນຈິງຜ່ານເນື້ອໜັງ. ແຕ່ໃນຂະນະທີ່ພຣະອົງປະຕິບັດພາລະກິດດັ່ງກ່າວ ພຣະອົງມີຊີວິດໃນເນື້ອໜັງມະນຸດ ແລະ ພຣະອົງບໍ່ໄດ້ຢູ່ເໜືອມະນຸດ. ບໍ່ວ່າພຣະອົງຮັກສາຄົນປ່ວຍດ້ວຍວິທີໃດກໍຕາມ, ພຣະອົງກໍຍັງມີຄວາມເປັນມະນຸດທຳມະດາ, ຍັງມີຊີວິດແບບມະນຸດປົກກະຕິ. ເຫດຜົນທີ່ເຮົາກ່າວວ່າ ໃນລະຫວ່າງຍຸກແຫ່ງການບັງເກີດເປັນມະນຸດຂອງພຣະເຈົ້າ ເນື້ອໜັງປະຕິບັດພາລະກິດທັງໝົດຂອງພຣະວິນຍານ ກໍເພາະວ່າ ບໍ່ວ່າພຣະອົງປະຕິບັດພາລະກິດຫຍັງກໍຕາມ ພຣະອົງປະຕິບັດຜ່ານເນື້ອໜັງ. ແຕ່ຍ້ອນພາລະກິດຂອງພຣະອົງ, ຜູ້ຄົນໄດ້ບໍ່ຖືວ່າ ເນື້ອໜັງຂອງພຣະອົງມີແກ່ນແທ້ຂອງເນື້ອໜັງມະນຸດຢ່າງສົມບູນ, ຍ້ອນເນື້ອໜັງນີ້ສາມາດປະຕິບັດສິ່ງອັດສະຈັນໄດ້ ແລະ ໃນຊ່ວງເວລາໃດໜຶ່ງແມ່ນສາມາດເຮັດສິ່ງທີ່ຢູ່ເໜືອມະນຸດໄດ້. ແນ່ນອນ ທຸກສິ່ງຢ່າງທີ່ເກີດຂຶ້ນທັງໝົດເກີດຂຶ້ນຫຼັງຈາກທີ່ພຣະອົງເລີ່ມຕົ້ນພັນທະກິດຂອງພຣະອົງ, ເຊັ່ນ ການທີ່ພຣະອົງຖືກທົດລອງເປັນເວລາສີ່ສິບມື້ ຫຼື ການແປງກາຍຢູ່ເທິງພູເຂົາ. ສະນັ້ນ ດ້ວຍພຣະເຢຊູ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າຍັງບໍ່ສົມບູນ, ພຽງແຕ່ເຮັດໃຫ້ສຳເລັດບາງສ່ວນເທົ່ານັ້ນ. ຊີວິດທີ່ພຣະອົງດຳລົງຜ່ານເນື້ອໜັງກ່ອນເລີ່ມຕົ້ນພາລະກິດຂອງພຣະອົງນັ້ນແມ່ນຢູ່ໃນຮູບແບບທຳມະດາທຸກຢ່າງ. ຫຼັງຈາກພຣະອົງເລີ່ມຕົ້ນພາລະກິດ ພຣະອົງຮັກສາໄວ້ພຽງແຕ່ເປືອກນອກຂອງເນື້ອໜັງຂອງພຣະອົງ. ຍ້ອນວ່າ ພາລະກິດຂອງພຣະອົງແມ່ນການສະແດງເຖິງຄວາມເປັນພຣະເຈົ້ານັ້ນ, ເຊິ່ງມັນຢູ່ເໜືອໜ້າທີ່ທຳມະດາຂອງເນື້ອໜັງ. ໃນທີ່ສຸດແລ້ວ ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າແຕກຕ່າງຈາກມະນຸດທີ່ມີເລືອດ ແລະ ເນື້ອ. ແນ່ນອນ ໃນຊີວິດປະຈຳວັນຂອງພຣະອົງ ພຣະອົງຕ້ອງການອາຫານ, ເສື້ອຜ້າ, ການນອນ ແລະ ທີ່ພັກອາໄສຄືກັບຄົນອື່ນໆ, ພຣະອົງຕ້ອງການຄວາມຈຳເປັນທັງໝົດທີ່ປົກກະຕິ ແລະ ມີຄວາມຮູ້ສຶກເປັນມະນຸດທຳມະດາ ແລະຄວາມຄິດຄືກັບມະນຸດທຳມະດາ. ຜູ້ຄົນຍັງເຫັນວ່າພຣະອົງເປັນມະນຸດທຳມະດາ ຍົກເວັ້ນແຕ່ວ່າພາລະກິດທີ່ພຣະອົງກະທຳເປັນສິ່ງທີ່ເໜືອທຳມະຊາດ. ຕາມຄວາມເປັນຈິງແລ້ວ ບໍ່ວ່າພຣະອົງໄດ້ເຮັດຫຍັງກໍຕາມ ພຣະອົງມີຊີວິດໃນຄວາມເປັນມະນຸດທຳມະດາ ແລະ ບໍ່ມີຫຍັງພິເສດ ແລະ ຕາບເທົ່າທີ່ພຣະອົງປະຕິບັດພາລະກິດນັ້ນ, ຄວາມຮູ້ສຶກຂອງພຣະອົງກໍທຳມະດາໂດຍສະເພາະ, ຄວາມຄິດຂອງພຣະອົງກໍຊັດເຈນແຈ້ງເປັນພິເສດ, ຫຼາຍກວ່າມະນຸດທຳມະດາຄົນອື່ນໆ. ມັນຈຳເປັນສຳລັບພຣະເຈົ້າຜູ້ບັງເກີດເປັນມະນຸດທີ່ຈະມີຄວາມຄິດ ແລະ ຄວາມຮູ້ສຶກດັ່ງກ່າວ, ຍ້ອນພາລະກິດທີ່ສັກສິດຕ້ອງໄດ້ຖືກສະແດງຜ່ານເນື້ອໜັງ ເຊິ່ງມີຄວາມຮູ້ສຶກທີ່ທຳມະດາຫຼາຍ ແລະ ມີຄວາມຄິດທີ່ຊັດເຈນຫຼາຍ, ພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ ເນື້ອໜັງຂອງພຣະອົງຈຶ່ງຈະສາມາດສະແດງອອກເຖິງພາລະກິດທີ່ສັກສິດໄດ້. ຕະຫຼອດເວລາສາມສິບສາມປີເຄິ່ງທີ່ພຣະເຢຊູມີຊີວິດຢູ່ເທິງແຜ່ນດິນໂລກ ເຊິ່ງພຣະອົງຮັກສາຄວາມເປັນມະນຸດທີ່ທຳມະດາຂອງພຣະອົງ, ແຕ່ຍ້ອນພາລະກິດຂອງພຣະອົງໃນລະຫວ່າງພັນທະກິດເວລາສາມປີເຄິ່ງນັ້ນ ຜູ້ຄົນຄິດວ່າ ພຣະອົງຢູ່ເໜືອກວ່າສິ່ງອື່ນໃດ, ພຣະອົງຢູ່ເໜືອກວ່າທຳມະຊາດກວ່າແຕ່ກ່ອນ. ແຕ່ໃນຄວາມເປັນຈິງ ຄວາມເປັນມະນຸດທີ່ທຳມະດາຂອງພຣະເຢຊູຍັງຄົງບໍ່ປ່ຽນແປງກ່ອນ ແລະຫຼັງຈາກທີ່ພຣະອົງເລີ່ມຕົ້ນພັນທະກິດຂອງພຣະອົງ; ຄວາມເປັນມະນຸດຂອງພຣະອົງກໍຍັງຄືເກົ່າຕະຫຼອດ

ເວລາ ແຕ່ວ່າຍ້ອນຄວາມແຕກຕ່າງລະຫວ່າງກ່ອນ ແລະ ຫຼັງຈາກທີ່ພຣະອົງເລີ່ມຕົ້ນພັນທະກິດຂອງພຣະອົງ ມີສອງມຸມມອງທີ່ແຕກຕ່າງກັນເກີດຂຶ້ນ ກ່ຽວຂ້ອງກັບເນື້ອໜັງຂອງພຣະອົງ. ບໍ່ວ່າຜູ້ຄົນຄິດແນວໃດກໍຕາມ ພຣະເຈົ້າຜູ້ບັງເກີດເປັນມະນຸດຮັກສາຄວາມເປັນມະນຸດທີ່ທຳມະດາ ແລະ ແຕ່ດັ້ງເດີມຂອງພຣະອົງຕະຫຼອດເວລາ, ຍ້ອນວ່າ ນັບຕັ້ງແຕ່ທີ່ພຣະເຈົ້າບັງເກີດເປັນມະນຸດ ພຣະອົງມີຊີວິດຢູ່ໃນເນື້ອໜັງ, ເນື້ອໜັງທີ່ມີຄວາມເປັນມະນຸດທຳມະດາ. ບໍ່ວ່າພຣະອົງຈະປະຕິບັດພັນທະກິດຂອງພຣະອົງ ຫຼື ບໍ່ກໍຕາມ, ຄວາມເປັນມະນຸດທີ່ທຳມະດາຂອງພຣະອົງບໍ່ສາມາດລົບລ້າງອອກໄດ້, ຍ້ອນວ່າຄວາມເປັນມະນຸດນັ້ນກໍຄືແກ່ນແທ້ພື້ນຖານຂອງເນື້ອໜັງ. ກ່ອນທີ່ພຣະເຢຊູຈະປະຕິບັດພັນທະກິດຂອງພຣະອົງ, ເນື້ອໜັງຂອງພຣະອົງກໍຢູ່ໃນສະພາບປົກກະຕິໂດຍສົມບູນ, ມີກິດຈະກຳທຸກສ່ວນຄືກັບມະນຸດທຳມະດາທົ່ວໄປ; ພຣະອົງບໍ່ໄດ້ປາກົດໃນລັກສະນະທີ່ເໜືອທຳມະຊາດແມ່ນແຕ່ໜ້ອຍດຽວ, ບໍ່ໄດ້ສະແດງໝາຍສຳຄັນທີ່ເປັນໜ້າອັດສະຈັນໃດໆ. ໃນເວລານັ້ນ ພຣະອົງເປັນພຽງມະນຸດທຳມະດາສາມັນຜູ້ໜຶ່ງທີ່ເຄົາລົບບູຊາພຣະເຈົ້າ ເຖິງແມ່ນການສະແຫວງຫາຂອງພຣະອົງສັດຊື່ ແລະ ຈິງໃຈຫຼາຍກວ່າຄົນອື່ນໆເທົ່ານັ້ນ. ນີ້ແມ່ນວິທີການສະແດງອອກຂອງຄວາມເປັນມະນຸດທຳມະດາຂອງພຣະອົງ. ຍ້ອນພຣະອົງບໍ່ໄດ້ປະຕິບັດພາລະກິດໃດເລີຍກ່ອນທີ່ຈະເຂົ້າຮັບພັນທະກິດຂອງພຣະອົງ, ຈຶ່ງບໍ່ມີໃຜຮັບຮູ້ເຖິງຕົວຕົນຂອງພຣະອົງ, ບໍ່ມີໃຜສາມາດບອກໄດ້ວ່າ ເນື້ອໜັງຂອງພຣະອົງແຕກຕ່າງຈາກຄົນອື່ນ, ຍ້ອນພຣະອົງບໍ່ໄດ້ປະຕິບັດສິ່ງອັດສະຈັນແມ່ນແຕ່ຢ່າງດຽວ, ບໍ່ໄດ້ປະຕິບັດພາລະກິດຂອງພຣະອົງເອງແມ່ນແຕ່ໜ້ອຍດຽວ. ເຖິງຢ່າງໃດກໍຕາມ ຫຼັງຈາກທີ່ພຣະອົງເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງ, ພຣະອົງກໍຮັກສາເປືອກນອກຂອງຄວາມເປັນມະນຸດທຳມະດາ ແລະ ຍັງມີຊີວິດຢູ່ໂດຍໃຊ້ເຫດຜົນແບບມະນຸດທຳມະດາ ແຕ່ຍ້ອນວ່າ ພຣະອົງໄດ້ເລີ່ມຕົ້ນປະຕິບັດພາລະກິດຂອງພຣະເຈົ້າເອງ, ໄດ້ເຂົ້າຮັບພັນທະກິດຂອງພຣະຄຣິດ ແລະ ປະຕິບັດພາລະກິດທີ່ມະນຸດ ທີ່ມີເລືອດເນື້ອບໍ່ສາມາດເຮັດໄດ້, ຜູ້ຄົນຈຶ່ງສັນນິຖານວ່າ ພຣະອົງບໍ່ໄດ້ມີຄວາມເປັນມະນຸດທີ່ທຳມະດາໄດ້ ແລະ ບໍ່ແມ່ນເນື້ອໜັງທຳມະດາຢ່າງສົມບູນ ແຕ່ເປັນເນື້ອໜັງທີ່ບໍ່ສົມບູນ. ຍ້ອນພາລະກິດທີ່ພຣະອົງປະຕິບັດ ຜູ້ຄົນຈຶ່ງກ່າວວ່າ ພຣະອົງເປັນພຣະເຈົ້າໃນເນື້ອໜັງທີ່ບໍ່ມີຄວາມເປັນມະນຸດທຳມະດາ. ສິ່ງດັ່ງກ່າວຄວາມເຂົ້າໃຈທີ່ຜິດພາດ ຍ້ອນວ່າ ຜູ້ຄົນບໍ່ເຂົ້າໃຈເຖິງຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າ. ການເຂົ້າໃຈຜິດນີ້ເກີດຂຶ້ນຈາກຄວາມຈິງທີ່ວ່າ ພາລະກິດທີ່ພຣະເຈົ້າສະແດງຜ່ານເນື້ອໜັງ ຄືແມ່ນພາລະກິດທີ່ສັກສິດ, ສະແດງອອກໃນເນື້ອໜັງທີ່ມີຄວາມເປັນມະນຸດທຳມະດາ. ພຣະເຈົ້າສະຖິດຢູ່ໃນເນື້ອໜັງ, ພຣະອົງອາໄສຢູ່ໃນເນື້ອໜັງ ແລະ ພາລະກິດຂອງພຣະອົງໃນຄວາມເປັນມະນຸດຂອງພຣະອົງປົດບັງຄວາມທຳມະດາຂອງຄວາມເປັນມະນຸດຂອງພຣະອົງ. ຍ້ອນເຫດຜົນນີ້ ຜູ້ຄົນເຊື່ອວ່າ ພຣະເຈົ້າບໍ່ມີຄວາມເປັນມະນຸດ ມີພຽງຄວາມເປັນພຣະເຈົ້າ.

ພຣະເຈົ້າ ໃນການບັງເກີດເປັນມະນຸດຄັ້ງທຳອິດຂອງພຣະອົງ ບໍ່ໄດ້ເຮັດໃຫ້ພາລະກິດແຫ່ງການບັງເກີດເປັນມະນຸດສົມບູນ; ພຣະອົງພຽງແຕ່ເຮັດໃຫ້ຂັ້ນຕອນທຳອິດຂອງພາລະກິດສົມບູນ ເຊິ່ງມັນຈຳເປັນສຳລັບພຣະເຈົ້າທີ່ຈະປະຕິບັດໃນເນື້ອໜັງ. ສະນັ້ນ ເພື່ອທີ່ຈະສຳເລັດພາລະກິດແຫ່ງການບັງເກີດ

ເປັນມະນຸດ ພຣະເຈົ້າໄດ້ກັບຄືນໄປສູ່ເນື້ອໜັງອີກຄັ້ງ ມີຊີວິດຢູ່ໂດຍຄວາມທຳມະດາ ແລະ ຄວາມເປັນຈິງທັງໝົດຂອງເນື້ອໜັງ ນັ້ນກໍຄື ການເຮັດໃຫ້ພຣະທຳຂອງພຣະເຈົ້າປາກົດໃນເນື້ອໜັງທີ່ທຳມະດາ ແລະ ບໍ່ມີຫຍັງພິເສດຢ່າງສົມບູນ ທັງໝົດກໍເພື່ອສຳເລັດພາລະກິດທີ່ພຣະອົງຍັງເຮັດບໍ່ແລ້ວໃນເນື້ອໜັງ. ໃນແກ່ນແທ້ແລ້ວ ການບັງເກີດເປັນມະນຸດຄັ້ງທີ່ສອງແມ່ນຄືກັນກັບຄັ້ງທຳອິດ ແຕ່ເປັນຈິງຫຼາຍກວ່າເກົ່າ, ເຖິງກັບທຳມະດາຫຼາຍກວ່າຄັ້ງທຳອິດ. ຜົນຕາມມາກໍຄື ຄວາມທຸກທໍລະມານຂອງການບັງເກີດເປັນມະນຸດຄັ້ງທີສອງຜະເຊີນແມ່ນຍິ່ງໃຫຍ່ກວ່າຄັ້ງທຳອິດ ແຕ່ຄວາມທຸກທໍລະມານນີ້ເປັນຜົນມາຈາກພັນທະກິດຜ່ານເນື້ອໜັງຂອງພຣະອົງ, ເຊິ່ງແຕກຕ່າງຈາກການຄວາມທຸກຂອງມະນຸດທີ່ເສື່ອມຊາມ. ມັນຍັງເກີດມາຈາກຄວາມເປັນທຳມະດາ ແລະ ຄວາມເປັນຈິງຂອງເນື້ອໜັງຂອງພຣະອົງ. ຍ້ອນພຣະອົງປະຕິບັດພັນທະກິດຂອງພຣະອົງໃນເນື້ອໜັງທຳມະດາ ແລະ ເປັນຈິງຢ່າງສິ້ນເຊີງ, ເນື້ອໜັງຕ້ອງອົດທົນຕໍ່ຄວາມຫຍຸ້ງຍາກທີ່ຍິ່ງໃຫຍ່. ຍິ່ງເນື້ອໜັງນີ້ທຳມະດາ ແລະ ເປັນຈິງຫຼາຍພຽງໃດ ພຣະອົງກໍທົນທຸກໃນການປະຕິບັດພັນທະກິດຂອງພຣະອົງຫຼາຍພຽງນັ້ນ. ພາລະກິດຂອງພຣະອົງທີ່ຖືກສະແດງອອກໃນເນື້ອໜັງທີ່ທຳມະດາຫຼາຍ ເຊິ່ງບໍ່ໄດ້ຢູ່ເໜືອທຳມະຊາດເລີຍ. ຍ້ອນເນື້ອໜັງຂອງພຣະອົງທຳມະດາ ແລະ ຕ້ອງຮັບແບກພາລະກິດແຫ່ງການຊ່ວຍມະນຸດ, ພຣະອົງຍິ່ງທົນທຸກຫຼາຍກວ່າເນື້ອໜັງທີ່ເໜືອທຳມະຊາດ ແລະ ການທົນທຸກທັງໝົດນີ້ເກີດມາຈາກຄວາມເປັນຈິງ ແລະ ຄວາມທຳມະດາຂອງເນື້ອໜັງຂອງພຣະອົງ. ຈາກການທີ່ທົນທຸກຂອງເນື້ອໜັງທັງສອງທີ່ບັງເກີດເປັນມະນຸດໄດ້ຮັບໃນຂະນະທີ່ປະຕິບັດພັນທະກິດຂອງພຣະອົງ ຄົນໆໜຶ່ງສາມາດເຫັນເຖິງແກ່ນແທ້ຂອງເນື້ອໜັງທີ່ບັງເກີດເປັນມະນຸດ. ຍິ່ງເນື້ອໜັງເປັນທຳມະດາພຽງໃດ ພຣະອົງຍິ່ງຕ້ອງອົດທົນກັບຄວາມລຳບາກທີ່ຍິ່ງໃຫຍ່ຫຼາຍພຽງນັ້ນໃນເວລາທີ່ປະຕິບັດພາລະກິດ; ຍິ່ງເມື່ອເນື້ອໜັງທີ່ປະຕິບັດພາລະກິດເປັນຈິງຫຼາຍພຽງໃດຄວາມຄິດຕ່າງໆນາໆທີ່ຜູ້ຄົນຈະຮັບກໍຍິ່ງຮຸນແຮງຫຼາຍພຽງນັ້ນ ແລະ ຄວາມອັນຕະລາຍກໍມີຄວາມສ່ຽງທີ່ຈະເກີດຂຶ້ນກັບພຣະອົງຫຼາຍພຽງນັ້ນ. ແລ້ວຢ່າງໃດກໍຕາມ ຍິ່ງເນື້ອໜັງເປັນຈິງຫຼາຍພຽງໃດ ແລະ ເນື້ອໜັງຍິ່ງມີຄວາມຕ້ອງການເພີ່ມ ແລະ ຄວາມສຳນຶກທີ່ສົມບູນຂອງມະນຸດທີ່ທຳມະດາຫຼາຍພຽງໃດ ພຣະອົງກໍຍິ່ງສາມາດປະຕິບັດພາລະກິດຂອງພຣະເຈົ້າໃນເນື້ອໜັງຫຼາຍພຽງນັ້ນ. ນັ້ນມັນແມ່ນເນື້ອໜັງຂອງພຣະເຢຊູທີ່ຖືກຄຶງທີ່ໄມ້ກາງແຂນ, ເນື້ອໜັງຂອງພຣະອົງທີ່ຍອມສະຫຼະເພື່ອເປັນເຄື່ອງບູຊາແທນຄວາມຜິດບາບ; ມັນແມ່ນດ້ວຍເນື້ອໜັງທີ່ມີຄວາມເປັນມະນຸດທຳມະດາ ທີ່ເຮັດໃຫ້ພຣະອົງເອົາຊະນະຊາຕານ ແລະ ຊ່ວຍມະນຸດໃຫ້ພົ້ນຈາກໄມ້ກາງແຂນຢ່າງສົມບູນ. ແລ້ວມັນແມ່ນເນື້ອໜັງຂອງພຣະເຈົ້າໃນການບັງເກີດເປັນມະນຸດຄັ້ງທີສອງແທ້ໆທີ່ປະຕິບັດພາລະກິດແຫ່ງການເອົາຊະນະ ແລະ ເອົາຊະນະຊາຕານ. ມີພຽງແຕ່ເນື້ອໜັງທີ່ທຳມະດາ ແລະ ເປັນຈິງຢ່າງສົມບູນເທົ່ານັ້ນທີ່ສາມາດປະຕິບັດພາລະກິດແຫ່ງການເອົາຊະນະທັງໝົດ ແລະ ສ້າງປະຈັກພະຍານທີ່ແຂງກ້າ. ນັ້ນໝາຍຄວາມວ່າ ການເອົາຊະນະມະນຸດຖືກເຮັດໃຫ້ມີປະສິດຕິພາບຜ່ານຄວາມເປັນຈິງ ແລະ ຄວາມທຳມະດາຂອງພຣະເຈົ້າຜ່ານເນື້ອໜັງ, ບໍ່ແມ່ນຜ່ານສິ່ງອັດສະຈັນ ແລະ ການເປີດເຜີຍທີ່ເໜືອທຳມະຊາດ. ພັນທະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດນີ້ແມ່ນເພື່ອກ່າວ ແລະ ເພື່ອເອົາຊະນະ ແລະ ເຮັດໃຫ້ມະນຸດສົມບູນ; ເວົ້າອີກ

ແບບໜຶ່ງກໍຄື ພາລະກິດຂອງພຣະວິນຍານທີ່ເຮັດໃຫ້ເກີດເປັນຈິງຜ່ານເນື້ອໜັງ ໜ້າທີ່ຂອງເນື້ອໜັງແມ່ນເພື່ອກ່າວພຣະທຳ ແລະ ເພື່ອເອົາຊະນະ, ເປີດເຜີຍ, ເຮັດໃຫ້ສົມບູນ ແລະ ກຳຈັດມະນຸດຢ່າງສົມບູນ. ດ້ວຍເຫດນັ້ນ ມັນແມ່ນພາລະກິດແຫ່ງການເອົາຊະນະນີ້ ທີ່ຈະເຮັດໃຫ້ພາລະກິດຂອງພຣະເຈົ້າໃນເນື້ອໜັງສຳເລັດລົງຢ່າງສົມບູນແບບ. ພາລະກິດການໄຖ່ບາບໃນເບື້ອງຕົ້ນເປັນພຽງການເລີ່ມຕົ້ນຂອງພາລະກິດແຫ່ງການບັງເກີດເປັນມະນຸດ; ເນື້ອໜັງຜູ້ທີ່ປະຕິບັດພາລະກິດແຫ່ງການເອົາຊະນະຈະເຮັດໃຫ້ພາລະກິດແຫ່ງການບັງເກີດເປັນມະນຸດທັງໝົດສົມບູນ. ກ່ຽວກັບເລື່ອງເພດຄົນໜຶ່ງເປັນຜູ້ຊາຍ ແລະ ອີກຄົນໜຶ່ງແມ່ນຜູ້ຍິງ; ດ້ວຍວິທີນີ້ ຄວາມໝາຍຂອງການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນໄດ້ຖືກເຮັດໃຫ້ສຳເລັດ ແລະ ກຳຈັດແນວຄິດຂອງມະນຸດກ່ຽວກັບພຣະເຈົ້າ: ພຣະເຈົ້າສາມາດເປັນທັງຜູ້ຊາຍ ແລະ ຜູ້ຍິງ ແລະ ໃນແກ່ນແທ້ແລ້ວ ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນໄຮ້ເພດ. ພຣະອົງສ້າງທັງຜູ້ຊາຍ ແລະ ຜູ້ຍິງ ແລະ ສຳລັບພຣະອົງແລ້ວ ບໍ່ມີການຈຳແນກລະຫວ່າງເພດ. ໃນຂັ້ນຕອນນີ້ຂອງພາລະກິດ ພຣະເຈົ້າບໍ່ປະຕິບັດໝາຍສຳຄັນ ແລະ ສິ່ງອັດສະຈັນ, ເພື່ອວ່າພາລະກິດຈະບັນລຸຜົນຂອງມັນດ້ວຍວິທີແຫ່ງພຣະທຳ. ຍິ່ງໄປກວ່ານັ້ນ ເຫດຜົນນີ້ກໍຍ້ອນວ່າ ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດໃນເວລານີ້ບໍ່ແມ່ນການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ, ແຕ່ເປັນການເອົາຊະນະມະນຸດຜ່ານການກ່າວ ເຊິ່ງຈະເວົ້າວ່າ ທັກສະໂດຍທຳມະຊາດຂອງພຣະເຈົ້າຜູ້ບັງເກີດເປັນເນື້ອໜັງແມ່ນການກ່າວພຣະທຳ ແລະ ເອົາຊະນະມະນຸດ, ບໍ່ແມ່ນການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ. ພາລະກິດຂອງພຣະອົງໃນຄວາມເປັນມະນຸດທຳມະດາບໍ່ແມ່ນການປະຕິບັດສິ່ງອັດສະຈັນ, ເຊິ່ງບໍ່ແມ່ນການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ, ແຕ່ເປັນການກ່າວພຣະທຳ ແລະ ດ້ວຍເຫດນັ້ນການບັງເກີດເປັນມະນຸດຄັ້ງທີສອງຈຶ່ງເບິ່ງຄືວ່າທຳມະດາຕໍ່ຜູ້ຄົນຫຼາຍກວ່າຄັ້ງທຳອິດ. ຜູ້ຄົນເຫັນວ່າການບັງເກີດຂອງພຣະເຈົ້າບໍ່ແມ່ນການຕົວະ; ແຕ່ວ່າພຣະເຈົ້າທີ່ບັງເກີດເປັນມະນຸດນີ້ແຕກຕ່າງຈາກພຣະເຢຊູທີ່ບັງເກີດເປັນມະນຸດ ແລະ ເຖິງແມ່ນວ່າ ພຣະອົງທັງສອງແມ່ນພຣະເຈົ້າທີ່ບັງເກີດເປັນມະນຸດ, ແຕ່ພຣະອົງກໍບໍ່ຄືກັນຢ່າງສິ້ນເຊີງ. ພຣະເຢຊູມີຄວາມເປັນມະນຸດທີ່ທຳມະດາ, ຄວາມເປັນມະນຸດທີ່ບໍ່ມີຫຍັງພິເສດ, ແຕ່ພຣະອົງປະກອບມີໝາຍສຳຄັນ ແລະ ສິ່ງອັດສະຈັນຫຼາຍຢ່າງ. ໃນພຣະເຈົ້າທີ່ບັງເກີດເປັນມະນຸດນີ້ ຕາຂອງມະນຸດຈະບໍ່ເຫັນໝາຍສຳຄັນ ຫຼື ສິ່ງອັດສະຈັນ, ບໍ່ມີການຮັກສາຄົນປ່ວຍ ຫຼື ຂັບໄລ່ຜີຮ້າຍ, ບໍ່ມີການຍ່າງເທິງທະເລ ຫຼື ການອົດອາຫານເປັນເວລາສີ່ສິບມື້... ພຣະອົງບໍ່ປະຕິບັດພາລະກິດດຽວກັນກັບທີ່ພຣະເຢຊູປະຕິບັດ, ນັ້ນບໍ່ແມ່ນຍ້ອນວ່າ ໃນແກ່ນແທ້ແລ້ວເນື້ອໜັງຂອງພຣະອົງແຕກຕ່າງຈາກພຣະເຢຊູ, ແຕ່ຍ້ອນວ່າ ມັນບໍ່ແມ່ນພັນທະກິດຂອງພຣະອົງທີ່ຈະຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍ. ພຣະອົງບໍ່ທຳລາຍພາລະກິດຂອງພຣະອົງເອງ, ບໍ່ລົບກວນພາລະກິດຂອງພຣະອົງເອງ. ຍ້ອນພຣະອົງເອົາຊະນະມະນຸດຜ່ານພຣະທຳທີ່ເປັນຈິງຂອງພຣະອົງ ຈຶ່ງບໍ່ຈຳເປັນທີ່ຈະເອົາຊະນະເຂົາດ້ວຍສິ່ງອັດສະຈັນ ແລະ ສະນັ້ນ ຂັ້ນຕອນນີ້ແມ່ນເພື່ອເຮັດໃຫ້ພາລະກິດຂອງການບັງເກີດເປັນມະນຸດສົມບູນ. ພຣະເຈົ້າທີ່ບັງເກີດເປັນມະນຸດໃນປັດຈຸບັນແມ່ນເນື້ອໜັງຢ່າງສົມບູນ ແລະ ບໍ່ມີຫຍັງທີ່ເໜືອທຳມະຊາດກ່ຽວກັບພຣະອົງ. ພຣະອົງປ່ວຍຄືກັບຄົນອື່ນໆ, ຕ້ອງການ

ອາຫານ ແລະ ເສື້ອຜ້າຄືກັບຄົນອື່ນໆ; ພຣະອົງເປັນເນື້ອໜັງຢ່າງສົມບູນ. ຖ້າໃນເວລານີ້ ພຣະເຈົ້າທີ່ບັງເກີດເປັນມະນຸດປະຕິບັດໝາຍສຳຄັນ ແລະ ສິ່ງອັດສະຈັນທີ່ເໜືອທຳມະຊາດ ຖ້າພຣະອົງຮັກສາຄົນປ່ວຍ, ຂັບໄລ່ຜີຮ້າຍ ຫຼື ສາມາດຂ້າດ້ວຍພຣະທຳຂໍ້ດຽວ, ພາລະກິດແຫ່ງການເອົາຊະນະຈະເຮັດໃຫ້ສຳເລັດໄດ້ແນວໃດ? ພາລະກິດຈະຂະຫຍາຍທ່າມກາງຊົນຕ່າງຊາດໄດ້ແນວໃດ? ການຮັກສາຄົນປ່ວຍ ແລະ ຂັບໄລ່ຜີຮ້າຍແມ່ນພາລະກິດຂອງຍຸກແຫ່ງພຣະຄຸນ, ມັນແມ່ນຂັ້ນຕອນແລກໃນພາລະກິດແຫ່ງການໄຖ່ບາບ ແລະ ບັດນີ້ ພຣະເຈົ້າໄດ້ຊ່ວຍມະນຸດຈາກໄມ້ກາງແຂນແລ້ວ ພຣະອົງຈຶ່ງບໍ່ປະຕິບັດພາລະກິດນັ້ນອີກຕໍ່ໄປ. ຖ້າໃນຍຸກສຸດທ້າຍນັ້ນ “ພຣະເຈົ້າ” ທີ່ຄ້າຍຄືພຣະເຢຊູປາກົດຂຶ້ນ ເຊິ່ງເປັນຄົນທີ່ຮັກສາຄົນປ່ວຍ, ຂັບໄລ່ຜີຮ້າຍ ແລະ ຖືກຄຶງໃສ່ໄມ້ກາງແຂນ, “ພຣະເຈົ້າ” ອົງນັ້ນ ເຖິງແມ່ນຈະຄ້າຍຄືລັກສະນະພຣະເຈົ້າໃນພຣະຄຳພີ ແລະ ມະນຸດຮັບເອົາຢ່າງງ່າຍດາຍ, ແຕ່ວ່າໃນແກ່ນແທ້ແລ້ວແມ່ນຈະບໍ່ແມ່ນເນື້ອໜັງທີ່ສະຖິດໂດຍພຣະວິນຍານຂອງພຣະເຈົ້າ, ແຕ່ໂດຍວິນຍານຊົ່ວຮ້າຍ. ຍ້ອນມັນເປັນຫຼັກການຂອງພາລະກິດຂອງພຣະເຈົ້າທີ່ຈະບໍ່ເຮັດຊໍ້າໃນສິ່ງທີ່ພຣະອົງໄດ້ເຮັດໃຫ້ສຳເລັດແລ້ວ. ດ້ວຍເຫດນັ້ນ ພາລະກິດຂອງການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າຈຶ່ງແຕກຕ່າງຈາກພາລະກິດຄັ້ງທຳອິດ. ໃນຍຸກສຸດທ້າຍ ພຣະເຈົ້າຮັບຮູ້ພາລະກິດແຫ່ງການເອົາຊະນະໃນເນື້ອໜັງທຳມະດາ ແລະ ບໍ່ມີຫຍັງພິເສດ; ພຣະອົງບໍ່ໄດ້ຮັກສາຄົນປ່ວຍ, ຈະບໍ່ຖືກຄຶງທີ່ໄມ້ກາງແຂນເພື່ອມະນຸດ, ມີພຽງແຕ່ກ່າວພຣະທຳໃນເນື້ອໜັງ, ເອົາຊະນະມະນຸດດ້ວຍເນື້ອໜັງ. ມີພຽງແຕ່ເນື້ອໜັງດັ່ງກ່າວເປັນເນື້ອໜັງທີ່ບັງເກີດຈາກພຣະເຈົ້າ; ມີພຽງແຕ່ເນື້ອໜັງດັ່ງກ່າວທີ່ສາມາດເຮັດໃຫ້ພາລະກິດຂອງພຣະເຈົ້າໃນເນື້ອໜັງສົມບູນໄດ້.

ບໍ່ວ່າໃນຂັ້ນຕອນນີ້ ພຣະເຈົ້າຜູ້ບັງເກີດເປັນມະນຸດກຳລັງອົດທົນຕໍ່ຄວາມລຳບາກ ຫຼື ປະຕິບັດພັນທະກິດຂອງພຣະອົງກໍຕາມ, ພຣະອົງເຮັດແບບນັ້ນກໍເພື່ອເຮັດໃຫ້ຄວາມໝາຍຂອງການບັງເກີດເປັນມະນຸດສົມບູນ, ຍ້ອນວ່າ ນີ້ແມ່ນການບັງເກີດຄັ້ງສຸດທ້າຍຂອງພຣະເຈົ້າ. ພຣະເຈົ້າພຽງແຕ່ສາມາດບັງເກີດເປັນມະນຸດສອງຄັ້ງ. ບໍ່ສາມາດມີຄັ້ງທີສາມໄດ້. ການບັງເກີດເປັນມະນຸດຄັ້ງທຳອິດເປັນຜູ້ຊາຍ, ຄັ້ງທີສອງເປັນຜູ້ຍິງ ແລະ ດ້ວຍເຫດນີ້ ພາບລັກສະນະເນື້ອໜັງຂອງພຣະເຈົ້າຈຶ່ງສົມບູນໃນຄວາມຄິດຂອງມະນຸດ; ຍິ່ງໄປກວ່ານັ້ນ ການບັງເກີດເປັນມະນຸດທັງສອງຄັ້ງໄດ້ເຮັດໃຫ້ພາລະກິດຂອງພຣະເຈົ້າໃນເນື້ອໜັງສຳເລັດແລ້ວ. ໃນຄັ້ງທຳອິດ ພຣະເຈົ້າຜູ້ບັງເກີດເປັນມະນຸດມີຄວາມເປັນມະນຸດທຳມະດາເພື່ອເຮັດໃຫ້ຄວາມໝາຍຂອງການບັງເກີດເປັນມະນຸດສົມບູນ. ເວລານີ້ ພຣະອົງກໍມີຄວາມເປັນມະນຸດທຳມະດາເຊັ່ນກັນ ແຕ່ຄວາມໝາຍຂອງການບັງເກີດເປັນມະນຸດແຕກຕ່າງກັນ: ການບັງເກີດເລິກເຊິ່ງກວ່າ ແລະ ພາລະກິດຂອງພຣະອົງກໍມີຄວາມໝາຍເລິກເຊິ່ງກວ່າ. ເຫດຜົນທີ່ພຣະເຈົ້າກາຍມາເປັນເນື້ອໜັງອີກຄັ້ງກໍເພື່ອເຮັດໃຫ້ຄວາມໝາຍຂອງການບັງເກີດເປັນມະນຸດສົມບູນ. ເມື່ອພຣະເຈົ້າໄດ້ສິ້ນສຸດຂັ້ນຕອນນີ້ຂອງພາລະກິດຂອງພຣະອົງຢ່າງສົມບູນແລ້ວ, ຄວາມໝາຍທັງໝົດຂອງການບັງເກີດເປັນມະນຸດ ນັ້ນກໍຄື ພາລະກິດຂອງພຣະເຈົ້າໃນເນື້ອໜັງມະນຸດ ຈະຖືກເຮັດໃຫ້ສົມບູນ ແລະ ຈະບໍ່ມີພາລະກິດໃດອີກທີ່ຈະເຮັດໃຫ້ສຳເລັດໂດຍຜ່ານເນື້ອໜັງມະນຸດ. ນັ້ນໝາຍຄວາມວ່າ ນັບຕັ້ງແຕ່ປັດຈຸບັນ

ເປັນຕົ້ນໄປ ພຣະເຈົ້ານັ້ນຈະບໍ່ມາສະຖິດເຂົ້າສູ່ເນື້ອໜັງມະນຸດອີກຄັ້ງເພື່ອປະຕິບັດພາລະກິດຂອງພຣະອົງ. ພຣະເຈົ້າປະຕິບັດພາລະກິດຂອງການບັງເກີດເປັນມະນຸດເພື່ອພຽງຊ່ວຍໃຫ້ມະນຸດລອດພົ້ນ ແລະ ເຮັດໃຫ້ມະນຸດຊາດສົມບູນແບບເທົ່ານັ້ນ. ເວົ້າອີກແບບໜຶ່ງກໍຄື ມັນບໍ່ແມ່ນເລື່ອງປົກກະຕິສຳລັບພຣະເຈົ້າທີ່ຈະເຂົ້າມາສູ່ເນື້ອໜັງ, ນອກຈາກເພື່ອຜົນປະໂຫຍດແຫ່ງພາລະກິດ. ໂດຍການມາເຂົ້າສູ່ເນື້ອໜັງເພື່ອປະຕິບັດພາລະກິດ ພຣະອົງສະແດງໃຫ້ຊາຕານເຫັນວ່າ ພຣະເຈົ້າເປັນເນື້ອໜັງ, ເປັນບຸກຄົນທຳມະດາ ແລະ ບຸກຄົນທີ່ບໍ່ມີຫຍັງພິເສດ ແລະ ເຖິງຢ່າງໃດກໍຕາມ ພຣະອົງສາມາດປົກຄອງຢ່າງມີໄຊຊະນະທົ່ວທັງແຜ່ນດິນໂລກ, ສາມາດເອົາຊະນະຊາຕານ, ໄຖ່ບາບມະນຸດຊາດ, ເອົາຊະນະມະນຸດຊາດ! ເປົ້າໝາຍຂອງພາລະກິດຂອງຊາຕານແມ່ນການເຮັດໃຫ້ມະນຸດຊາດເສື່ອມຊາມ, ໃນຂະນະທີ່ເປົ້າໝາຍຂອງພາລະກິດຂອງພຣະເຈົ້າແມ່ນການຊ່ວຍມະນຸດຊາດໃຫ້ລອດພົ້ນ. ຊາຕານກັກມະນຸດໄວ້ໃນເຫວເລິກທີ່ບໍ່ສິ້ນສຸດ ໃນຂະນະທີ່ພຣະເຈົ້າຊ່ວຍເຂົາອອກຈາກບ່ອນນັ້ນ. ຊາຕານເຮັດໃຫ້ມະນຸດທຸກຄົນບູຊາມັນ, ໃນຂະນະທີ່ພຣະເຈົ້າເຮັດໃຫ້ພວກເຂົາຢູ່ພາຍໃຕ້ອຳນາດຂອງພຣະອົງ, ຍ້ອນພຣະອົງເປັນພຣະຜູ້ເປັນເຈົ້າແຫ່ງການຊົງສ້າງ. ພາລະກິດທຸກຢ່າງນີ້ແມ່ນເຮັດໃຫ້ສຳເລັດຜ່ານການບັງເກີດເປັນມະນຸດສອງຄັ້ງຂອງພຣະເຈົ້າ. ໃນແກ່ນແທ້ແລ້ວ ເນື້ອໜັງຂອງພຣະອົງແມ່ນການຮ່ວມຕົວກັນລະຫວ່າງການເປັນມະນຸດ, ການເປັນພຣະເຈົ້າ ແລະ ຄວາມເປັນມະນຸດທຳມະດາ. ສະນັ້ນຫາກປາສະຈາກເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າ ພຣະເຈົ້າກໍບໍ່ສາມາດບັນລຸຜົນໃນການຊ່ວຍມະນຸດຊາດໃຫ້ລອດພົ້ນ ແລະ ຫາກປາສະຈາກຄວາມເປັນມະນຸດທຳມະດາຂອງເນື້ອໜັງຂອງພຣະອົງ, ພາລະກິດຂອງພຣະອົງຜ່ານເນື້ອໜັງກໍຍັງບໍ່ສາມາດບັນລຸຜົນໄດ້. ແກ່ນແທ້ຂອງການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນພຣະອົງຕ້ອງມີຄວາມເປັນມະນຸດທຳມະດາ; ຖ້າບໍ່ດັ່ງນັ້ນ ກໍຈະກົງກັນຂ້າມກັບເຈດຕະນາເດີມຂອງພຣະເຈົ້າໃນການບັງເກີດເປັນມະນຸດ.

ເປັນຫຍັງເຮົາຈຶ່ງກ່າວວ່າ ຄວາມໝາຍຂອງການບັງເກີດເປັນມະນຸດບໍ່ໄດ້ຖືກເຮັດໃຫ້ສົມບູນໃນພາລະກິດຂອງພຣະເຢຊູ? ຍ້ອນວ່າ ພຣະທຳບໍ່ໄດ້ກາຍເປັນເນື້ອໜັງຢ່າງສິ້ນເຊີງ. ສິ່ງທີ່ພຣະເຢຊູເຮັດແມ່ນເປັນພຽງສ່ວນໜຶ່ງຂອງພາລະກິດຂອງພຣະເຈົ້າຜ່ານເນື້ອໜັງເທົ່ານັ້ນ; ພຣະອົງພຽງແຕ່ປະຕິບັດພາລະກິດແຫ່ງການໄຖ່ບາບ ແລະ ບໍ່ໄດ້ປະຕິບັດພາລະກິດແຫ່ງການຮັບເອົາມະນຸດຢ່າງສົມບູນ. ຍ້ອນເຫດຜົນນີ້ ພຣະເຈົ້າຈຶ່ງກາຍມາເປັນເນື້ອໜັງອີກຄັ້ງໃນຍຸກສຸດທ້າຍ. ຂັ້ນຕອນນີ້ຂອງພາລະກິດຍັງຖືກປະຕິບັດໃນເນື້ອໜັງທຳມະດາເຊັ່ນກັນ; ມັນໄດ້ຖືກປະຕິບັດທັງໝົດໂດຍມະນຸດທຳມະດາ, ເຊິ່ງທີ່ມີຄວາມເປັນມະນຸດທີ່ບໍ່ໄດ້ວິເສດຫຍັງແມ່ນແຕ່ໜ້ອຍດຽວ. ເວົ້າອີກຢ່າງກໍຄື ພຣະເຈົ້າກາຍເປັນມະນຸດໂດຍສົມບູນ; ພຣະອົງເປັນບຸກຄົນທີ່ມີຕົວຕົນຂອງພຣະເຈົ້າ, ເປັນມະນຸດທີ່ສົມບູນ, ເປັນເນື້ອໜັງທີ່ສົມບູນ, ຜູ້ທີ່ປະຕິບັດພາລະກິດ. ສາຍຕາຂອງມະນຸດເຫັນຮ່າງກາຍທີ່ເປັນເນື້ອໜັງທີ່ບໍ່ມີຄວາມພິເສດຫຍັງທັງໝົດ, ເປັນບຸກຄົນທຳມະດາສາມັນທີ່ສາມາດເວົ້າພາສາແຫ່ງສະຫວັນໄດ້, ຜູ້ເປັນຜູ້ທີ່ບໍ່ສະແດງໝາຍສຳຄັນທີ່ມະຫັດສະຈັນໃດໆ, ບໍ່ເຮັດສິ່ງອັດສະຈັນ, ແຮງໄກທີ່ຈະເປີດໂປງຄວາມຈິງພາຍໃນທີ່ກ່ຽວກັບສາສະໜານັ້ນໃນຫ້ອງປະຊຸມໃຫຍ່ເລີຍ. ສຳລັບຜູ້ຄົນແລ້ວ ພາລະກິດຂອງເນື້ອໜັງທີ່ບັງເກີດ

ເປັນມະນຸດຄັ້ງທີສອງເບິ່ງບໍ່ຄືກັບການບັງເກີດເປັນມະນຸດໃນຄັ້ງທຳອິດ ຫຼາຍເຖິງຂັ້ນທັງສອງເບິ່ງຄືວ່າບໍ່ມີຫຍັງຄ້າຍຄືກັນເລີຍ ແລະ ບໍ່ມີຫຍັງໃນພາລະກິດຄັ້ງທຳອິດສາມາດເຫັນໃນຄັ້ງນີ້ໄດ້. ເຖິງແມ່ນວ່າພາລະກິດຂອງເນື້ອໜັງຜູ້ບັງເກີດເປັນມະນຸດຄັ້ງທີສອງແຕກຕ່າງຈາກຄັ້ງທຳອິດ, ເຊິ່ງນັ້ນບໍ່ໄດ້ພິສູດວ່າແຫຼ່ງກຳເນີດຂອງພຣະອົງທັງສອງບໍ່ແມ່ນສິ່ງອັນໜຶ່ງອັນດຽວກັນ. ບໍ່ວ່າແຫຼ່ງກຳເນີດຂອງພຣະອົງທັງສອງຈະຄືກັນ ຫຼື ບໍ່ແມ່ນອີງຕາມທຳມະຊາດຂອງພາລະກິດທີ່ເຮັດສຳເລັດໂດຍເນື້ອໜັງ ແລະ ບໍ່ແມ່ນຕາມເປືອກນອກຂອງພຣະອົງທັງສອງ. ໃນລະຫວ່າງພາລະກິດສາມຂັ້ນຕອນຂອງພຣະອົງ ພຣະເຈົ້າບັງເກີດເປັນມະນຸດສອງຄັ້ງ ແລະ ທັງສອງຄັ້ງ ພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດເລີ່ມເປີດຍຸກໃໝ່, ນຳພາພາລະກິດໃໝ່; ການບັງເກີດເປັນມະນຸດທັງສອງຄວບຄູ່ເສີມເຊິ່ງກັນແລະກັນ. ມັນເປັນໄປບໍ່ໄດ້ທີ່ຕາຂອງມະນຸດຈະເບິ່ງອອກວ່າ ເນື້ອໜັງທັງສອງມາຈາກແຫຼ່ງກຳເນີດດຽວກັນແທ້ໆ. ແນ່ນອນ ສິ່ງນີ້ແມ່ນຢູ່ເໜືອຄວາມສາມາດຂອງສາຍຕາຂອງມະນຸດ ຫຼື ຄວາມຄິດຂອງມະນຸດ. ແຕ່ໃນແກ່ນແທ້ຂອງພຣະອົງ ພຣະອົງເປັນອັນໜຶ່ງອັນດຽວກັນ, ຍ້ອນພາລະກິດຂອງພຣະອົງເລີ່ມຕົ້ນຈາກພຣະວິນຍານດຽວກັນ. ບໍ່ວ່າເນື້ອໜັງທີ່ບັງເກີດເປັນມະນຸດທັງສອງຈະເກີດຈາກແຫຼ່ງກຳເນີດດຽວກັນ ຫຼື ບໍ່ກໍຕາມ ແມ່ນບໍ່ສາມາດຕັດສິນໄດ້ຈາກຍຸກ ແລະ ບ່ອນທີ່ພຣະອົງກຳເນີດ ຫຼື ປັດໃຈອື່ນໆ, ແຕ່ໂດຍພາລະກິດອັນສັກສິດຂອງພຣະອົງ. ເນື້ອໜັງທີ່ບັງເກີດນັ້ນເປັນມະນຸດຄັ້ງທີສອງບໍ່ໄດ້ປະຕິບັດພາລະກິດໃດເລີຍທີ່ພຣະເຢຊູປະຕິບັດ, ຍ້ອນພາລະກິດຂອງພຣະເຈົ້າບໍ່ໄດ້ຍຶດໝັ້ນກັບທຳນຽມ, ແຕ່ເປີດເສັ້ນທາງໃໝ່ໃນແຕ່ລະຄັ້ງ. ເນື້ອໜັງທີ່ບັງເກີດເປັນມະນຸດຄັ້ງທີສອງບໍ່ໄດ້ແນໃສ່ການລົງເລິກ ຫຼື ການເຮັດເກີດຄວາມປະທັບໃຈຂອງເນື້ອໜັງຄັ້ງທຳອິດໃນຄວາມຄິດຂອງຜູ້ຄົນ, ແຕ່ເພື່ອປະກອບເສີມ ແລະ ເຮັດໃຫ້ມັນສົມບູນຂຶ້ນ, ເພື່ອເຮັດໃຫ້ຄວາມຮູ້ຂອງມະນຸດກ່ຽວກັບພຣະເຈົ້າເລິກເຊິ່ງຂຶ້ນ, ເພື່ອທຳລາຍກົດລະບຽບທຸກຂໍ້ທີ່ມີຢູ່ໃນຫົວໃຈຂອງຜູ້ຄົນ ແລະ ເພື່ອກຳຈັດພາບທີ່ຜິດກ່ຽວກັບພຣະເຈົ້າໃນຫົວໃຈຂອງພວກເຂົາ. ເຊິ່ງມັນສາມາດເວົ້າໄດ້ວ່າ ບໍ່ມີຂັ້ນຕອນໃດຂອງພາລະກິດຂອງພຣະເຈົ້າເອງສາມາດມອບຄວາມຮູ້ກ່ຽວກັບພຣະອົງໃຫ້ແກ່ມະນຸດໄດ້ຢ່າງສົມບູນ; ເຊິ່ງແຕ່ລະຂັ້ນຕອນແມ່ນໃຫ້ຄວາມຮູ້ພຽງແຕ່ສ່ວນໜຶ່ງ, ບໍ່ແມ່ນທັງໝົດ. ເຖິງແມ່ນພຣະເຈົ້າສະແດງອຸປະນິໄສຂອງພຣະອົງຢ່າງຄົບຖ້ວນ, ແຕ່ຍ້ອນຄວາມສາມາດໃນການເຂົ້າໃຈຂອງມະນຸດມີຄວາມຈຳກັດ, ຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າຍັງຄົງບໍ່ສົມບູນ. ມັນເປັນໄປບໍ່ໄດ້ທີ່ຈະໃຊ້ພາສາມະນຸດເພື່ອສື່ສານອຸປະນິໄສທັງໝົດຂອງພຣະເຈົ້າ; ຍິ່ງໄປກວ່ານັ້ນ ຂັ້ນຕອນໜຶ່ງໃນພາລະກິດຂອງພຣະອົງຈະສະແດງເຖິງພຣະເຈົ້າໄດ້ຢ່າງສົມບູນໄດ້ແນວໃດ? ພຣະອົງປະຕິບັດພາລະກິດໃນເນື້ອໜັງພາຍໃຕ້ການປົກຄຸມຂອງຄວາມເປັນມະນຸດທຳມະດາຂອງພຣະອົງ ແລະ ຄົນໆໜຶ່ງນັ້ນພຽງແຕ່ສາມາດຮູ້ຈັກພຣະອົງໄດ້ຜ່ານການສະແດງອອກຂອງຄວາມເປັນພຣະເຈົ້າຂອງພຣະອົງ, ບໍ່ແມ່ນຜ່ານເປືອກຮ່າງກາຍຂອງພຣະອົງ. ພຣະເຈົ້າມາສູ່ເນື້ອໜັງເພື່ອອະນຸຍາດໃຫ້ມະນຸດຮູ້ຈັກພຣະອົງຜ່ານຫຼາກຫຼາຍວິທີທາງຂອງພາລະກິດ ແລະ ບໍ່ມີຈັກເທື່ອທີ່ສອງຂັ້ນຕອນຂອງພາລະກິດຂອງພຣະອົງຈະຄືກັນ. ມີພຽງແຕ່ວິທີນີ້ທີ່ມະນຸດສາມາດມີຄວາມຮູ້ຢ່າງຄົບຖ້ວນກ່ຽວກັບພາລະກິດຂອງພຣະເຈົ້າໃນເນື້ອໜັງ, ບໍ່ຈຳກັດພຽງດ້ານໃດໜຶ່ງ. ເຖິງ

ແມ່ນວ່າ ພາລະກິດຂອງເນື້ອໜັງທີ່ເກີດເປັນມະນຸດສອງຄັ້ງແຕກຕ່າງກັນ, ແກ່ນແທ້ຂອງເນື້ອໜັງ ແລະ ແຫຼ່ງກຳເນີດຂອງພາລະກິດຂອງພຣະອົງແມ່ນຄືກັນ; ມີແຕ່ວ່າ ພຣະອົງທັງສອງດຳລົງຢູ່ຕໍ່ເພື່ອປະຕິບັດສອງຂັ້ນຕອນຂອງພາລະກິດທີ່ແຕກຕ່າງກັນ ແລະ ເກີດຂຶ້ນໃນສອງຍຸກທີ່ແຕກຕ່າງກັນ. ບໍ່ວ່າແມ່ນຫຍັງກໍຕາມ, ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າມີແກ່ນແທ້ທີ່ຄືກັນ ແລະ ຕົ້ນກຳເນີດທີ່ຄືກັນ, ນີ້ຄືຄວາມຈິງທີ່ບໍ່ມີຜູ້ໃດສາມາດປະຕິເສດໄດ້.

# ພາລະກິດຂອງພຣະເຈົ້າ ແລະ ການປະຕິບັດຂອງມະນຸດ

ພາລະກິດຂອງພຣະເຈົ້າທ່າມກາງມະນຸດແມ່ນບໍ່ສາມາດຕັດຂາດຈາກມະນຸດໄດ້, ຍ້ອນມະນຸດຄືເປົ້າໝາຍຂອງພາລະກິດນີ້ ແລະ ເປັນພຽງສິ່ງມີຊີວິດດຽວທີ່ພຣະເຈົ້າສ້າງ ເຊິ່ງສາມາດເປັນພະຍານໃຫ້ກັບພຣະເຈົ້າໄດ້. ຊີວິດຂອງມະນຸດ ແລະ ກິດຈະກຳທຸກຢ່າງຂອງມະນຸດແມ່ນບໍ່ສາມາດຕັດຂາດຈາກພຣະເຈົ້າໄດ້ ແລະ ລ້ວນແລ້ວແຕ່ຖືກຄວບຄຸມໂດຍກຳມືຂອງພຣະເຈົ້າ ແລະ ມັນຍັງເວົ້າໄດ້ວ່າ ບໍ່ມີໃຜສາມາດມີຊີວິດຢູ່ຢ່າງເປັນອິດສະຫຼະຈາກພຣະເຈົ້າໄດ້. ບໍ່ມີໃຜສາມາດປະຕິເສດສິ່ງນີ້ໄດ້ ຍ້ອນມັນຄືຄວາມຈິງ. ທຸກສິ່ງທີ່ພຣະເຈົ້າເຮັດແມ່ນເພື່ອຜົນປະໂຫຍດຂອງມະນຸດຊາດ ແລະ ແນໃສ່ແຜນການຂອງຊາຕານ. ທຸກສິ່ງທີ່ມະນຸດຕ້ອງການແມ່ນມາຈາກພຣະເຈົ້າ ແລະ ພຣະເຈົ້າຄືແຫຼ່ງກຳເນີດແຫ່ງຊີວິດຂອງມະນຸດ. ສະນັ້ນ ມະນຸດຈຶ່ງບໍ່ສາມາດອອກຫ່າງຈາກພຣະເຈົ້າໄດ້. ຍິ່ງໄປກວ່ານັ້ນ ພຣະເຈົ້າບໍ່ເຄີຍມີເຈດຕະນາທີ່ຈະອອກຫ່າງຈາກມະນຸດຈັກເທື່ອ. ພາລະກິດທີ່ພຣະເຈົ້າປະຕິບັດແມ່ນເພື່ອມະນຸດຊາດທັງປວງ ແລະ ຄວາມຄິດຂອງພຣະອົງກໍມີຄວາມກະລຸນາຢູ່ສະເໝີ. ສຳລັບມະນຸດ, ພາລະກິດຂອງພຣະເຈົ້າ ແລະ ຄວາມຄິດຂອງພຣະເຈົ້າ (ນັ້ນຄືຄວາມປະສົງຂອງພຣະເຈົ້າ) ທັງສອງຢ່າງນັ້ນຄື "ນິມິດ" ທີ່ມະນຸດຄວນຮູ້. ນິມິດດັ່ງກ່າວຍັງເປັນການຄຸ້ມຄອງຂອງພຣະເຈົ້າ ແລະ ເປັນພາລະກິດທີ່ມະນຸດບໍ່ສາມາດປະຕິບັດໄດ້. ໃນເວລາດຽວກັນນັ້ນ ເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຈາກມະນຸດໃນລະຫວ່າງພາລະກິດຂອງພຣະອົງແມ່ນເອີ້ນວ່າ "ການປະຕິບັດ" ຂອງມະນຸດ. ນິມິດຄືພາລະກິດຂອງພຣະເຈົ້າເອງ ຫຼື ມັນເປັນຄວາມປະສົງຂອງພຣະອົງທີ່ມີຕໍ່ມະນຸດຊາດ ຫຼື ຈຸດປະສົງ ແລະ ຄວາມໝາຍຂອງພາລະກິດຂອງພຣະອົງ. ຍັງສາມາດເວົ້າໄດ້ວ່າ ນິມິດເປັນສ່ວນໜຶ່ງຂອງການຄຸ້ມຄອງ, ຍ້ອນການຄຸ້ມຄອງນີ້ຄືພາລະກິດຂອງພຣະເຈົ້າ ແລະ ແນໃສ່ມະນຸດ ເຊິ່ງໝາຍຄວາມວ່າ ມັນຄືພາລະກິດທີ່ພຣະເຈົ້າປະຕິບັດທ່າມກາງມະນຸດ. ພາລະກິດນີ້ຄືຫຼັກຖານ ແລະ ເສັ້ນທາງທີ່ມະນຸດມາຮູ້ຈັກພຣະເຈົ້າ ແລະ ມັນມີຄວາມສຳຄັນທີ່ສຸດສຳລັບມະນຸດ. ແທນທີ່ຈະໃສ່ໃຈກັບຄວາມຮູ້ກ່ຽວກັບພາລະກິດຂອງພຣະເຈົ້າ, ຖ້າຜູ້ຄົນພຽງແຕ່ໃສ່ໃຈໃນຄຳສັ່ງສອນກ່ຽວກັບຄວາມເຊື່ອໃນພຣະເຈົ້າ ຫຼື ໃນລາຍລະອຽດເລັກໆນ້ອຍໆທີ່ບໍ່ສຳຄັນ, ແລ້ວພວກເຂົາກໍຈະບໍ່ຮູ້ຈັກພຣະເຈົ້າແທ້ໆ ແລະ ຍິ່ງໄປກວ່ານັ້ນ ພວກເຂົາຈະບໍ່ເປັນທີ່ພໍໃຈຂອງພຣະເຈົ້າ. ໃນພາລະກິດຂອງພຣະເຈົ້າທີ່ມີປະໂຫຍດຕໍ່ຄວາມຮູ້ຂອງມະນຸດຫຼາຍກ່ຽວກັບພຣະເຈົ້າແມ່ນເອີ້ນວ່າ ນິມິດ. ນິມິດເຫຼົ່ານີ້ຄືພາລະກິດຂອງພຣະເຈົ້າ, ຄວາມປະສົງຂອງພຣະເຈົ້າ ແລະ ເປົ້າໝາຍ ແລະ ຄວາມສຳຄັນຂອງພາລະກິດຂອງພຣະເຈົ້າ; ສິ່ງເຫຼົ່ານັ້ນລ້ວນແລ້ວແຕ່ເປັນປະໂຫຍດຕໍ່ມະນຸດ. ການປະຕິບັດໝາຍເຖິງສິ່ງທີ່ມະນຸດຄວນເຮັດ, ສິ່ງທີ່ຄວນຖືກເຮັດໂດຍສິ່ງມີຊີວິດທີ່ຕິດຕາມພຣະເຈົ້າ. ມັນຍັງເປັນໜ້າທີ່ຂອງມະນຸດອີກດ້ວຍ. ແຕ່ສິ່ງທີ່ມະນຸດຄວນເຮັດບໍ່ແມ່ນສິ່ງທີ່ມະນຸດເຂົ້າໃຈມາຕັ້ງແຕ່ຕົ້ນ, ແຕ່ເປັນເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຈາກມະນຸດໃນລະຫວ່າງພາລະກິດຂອງພຣະອົງ. ເງື່ອນໄຂເຫຼົ່ານີ້ຍິ່ງເລິກເຊິ່ງຂຶ້ນ ແລະ ຖືກຍົກໃຫ້ສູງຂຶ້ນເທື່ອລະໜ້ອຍເມື່ອ

ພຣະເຈົ້າປະຕິບັດພາລະກິດ. ຕົວຢ່າງເຊັ່ນ: ໃນລະຫວ່າງຍຸກແຫ່ງພຣະບັນຍັດ ມະນຸດຕ້ອງປະຕິບັດຕາມພຣະບັນຍັດ ແລະ ໃນລະຫວ່າງຍຸກແຫ່ງພຣະຄຸນ ມະນຸດຕ້ອງໄດ້ແບກໄມ້ກາງແຂນ. ຍຸກແຫ່ງອານາຈັກແມ່ນແຕກຕ່າງ: ເງື່ອນໄຂທີ່ຮຽກຮ້ອງຈາກມະນຸດແມ່ນສູງກວ່າເງື່ອນໄຂໃນລະຫວ່າງຍຸກແຫ່ງພຣະບັນຍັດ ແລະ ຢູ່ໃນຍຸກແຫ່ງພຣະຄຸນ. ເມື່ອນິມິດຖືກຍົກສູງຂຶ້ນ, ເງື່ອນໄຂທີ່ຮຽກຮ້ອງຈາກມະນຸດກໍຍິ່ງສູງຂຶ້ນ ແລະ ຍິ່ງຊັດເຈນ ແລະ ເປັນຈິງຫຼາຍຂຶ້ນ. ໃນທຳນອງດຽວກັນ, ນິມິດຍັງກາຍເປັນຈິງຫຼາຍຂຶ້ນເລື້ອຍໆ. ນິມິດທີ່ເປັນຈິງຕ່າງໆເຫຼົ່ານີ້ບໍ່ພຽງແຕ່ເປັນປະໂຫຍດຕໍ່ຄວາມເຊື່ອຟັງຂອງມະນຸດທີ່ມີຕໍ່ພຣະເຈົ້າ, ແຕ່ຍິ່ງໄປກວ່ານັ້ນ ນິມິດເຫຼົ່ານັ້ນຍັງເປັນປະໂຫຍດຕໍ່ຄວາມຮູ້ຂອງເຂົາກ່ຽວກັບພຣະເຈົ້າ.

ເມື່ອປຽບທຽບກັບຍຸກທີ່ຜ່ານມາ, ພາລະກິດຂອງພຣະເຈົ້າໃນລະຫວ່າງຍຸກແຫ່ງອານາຈັກແມ່ນມີຄວາມເປັນຈິງຫຼາຍກວ່າ, ມັນແນໃສ່ແກ່ນແທ້ຂອງມະນຸດ ແລະ ການປ່ຽນແປງໃນອຸປະນິໄສຂອງເຂົາຫຼາຍກວ່າ ແລະ ສາມາດເປັນພະຍານໃຫ້ພຣະເຈົ້າເອງຫຼາຍຂຶ້ນສຳລັບທຸກຄົນທີ່ຕິດຕາມພຣະອົງ. ເວົ້າອີກຢ່າງກໍຄື ໃນລະຫວ່າງຍຸກແຫ່ງອານາຈັກ ໃນຂະນະທີ່ພຣະອົງປະຕິບັດພາລະກິດ, ພຣະເຈົ້າສະແດງພຣະອົງເອງຕໍ່ມະນຸດຫຼາຍກວ່າເວລາໃດໆໃນອະດີດ ເຊິ່ງໝາຍຄວາມວ່າ ນິມິດທີ່ມະນຸດຄວນຮູ້ແມ່ນສູງກວ່ານິມິດໃນຍຸກຕ່າງໆທີ່ຜ່ານມາ. ເພາະວ່າພາລະກິດຂອງພຣະເຈົ້າທ່າມກາງມະນຸດໄດ້ເຂົ້າສູ່ອານາເຂດທີ່ບໍ່ເຄີຍມີມາກ່ອນ, ໃນນິມິດທີ່ມະນຸດຮູ້ໃນລະຫວ່າງຍຸກແຫ່ງອານາຈັກຈຶ່ງສູງສຸດຕະຫຼອດແຜນການຄຸ້ມຄອງທັງໝົດ. ໃນພາລະກິດຂອງພຣະເຈົ້າໄດ້ເຂົ້າສູ່ອານາເຂດທີ່ບໍ່ເຄີຍມີມາກ່ອນ ແລະດ້ວຍເຫດນັ້ນ ນິມິດທີ່ມະນຸດຈະໄດ້ຮູ້ຈຶ່ງກາຍເປັນນິມິດທີ່ສູງທີ່ສຸດໃນບັນດານິມິດທັງໝົດ ແລະການປະຕິບັດຂອງມະນຸດທີ່ເປັນຜົນຕາມມາ ກໍສູງກວ່າການປະຕິບັດໃນຍຸກອື່ນໆ ຍ້ອນການປະຕິບັດຂອງມະນຸດປ່ຽນແປງໄປຕາມບາດກ້າວພ້ອມໆກັບນິມິດ ແລະ ຄວາມສົມບູນຂອງນິມິດກໍຍັງໝາຍເຖິງຄວາມສົມບູນແຫ່ງເງື່ອນໄຂຂອງມະນຸດອີກດ້ວຍ. ທັນທີທີ່ການຄຸ້ມຄອງທັງໝົດຂອງພຣະເຈົ້າຢຸດລົງ, ການປະຕິບັດຂອງມະນຸດກໍຢຸດເຊັ່ນດຽວກັນ ແລະ ຫາກປາສະຈາກພາລະກິດຂອງພຣະເຈົ້າ, ມະນຸດກໍຈະບໍ່ມີທາງເລືອກນອກຈາກຮັກສາຄຳສັ່ງສອນໃນອະດີດ ຫຼື ບໍ່ດັ່ງນັ້ນກໍຈະບໍ່ມີບ່ອນໃຫ້ເພິ່ງພາ. ຫາກປາສະຈາກນິມິດໃໝ່ ມະນຸດກໍຈະບໍ່ມີການປະຕິບັດໃໝ່; ຫາກປາສະຈາກນິມິດທີ່ສົມບູນ, ມະນຸດກໍຈະບໍ່ມີການປະຕິບັດທີ່ສົມບູນ; ຫາກປາສະຈາກນິມິດທີ່ສູງຂຶ້ນ, ມະນຸດກໍຈະບໍ່ມີການປະຕິບັດທີ່ສູງຂຶ້ນ. ການປະຕິບັດຂອງມະນຸດປ່ຽນແປງໄປພ້ອມກັບບາດກ້າວຂອງພຣະເຈົ້າ ແລະໃນທຳນອງດຽວກັນ ຄວາມຮູ້ ແລະ ປະສົບການຂອງມະນຸດກໍຍັງປ່ຽນແປງໄປພ້ອມກັບພາລະກິດຂອງພຣະເຈົ້າເຊັ່ນກັນ. ບໍ່ວ່າມະນຸດຈະມີຄວາມສາມາດຫຼາຍສໍ່າໃດກໍຕາມ, ເຂົາກໍຍັງບໍ່ສາມາດຕັດຂາດຈາກພຣະເຈົ້າໄດ້ ແລະ ຖ້າພຣະເຈົ້າຕ້ອງຢຸດປະຕິບັດພາລະກິດພຽງແຕ່ວິນາທີດຽວ, ມະນຸດກໍຈະຕາຍຈາກຄວາມໂກດຮ້າຍຂອງພຣະອົງທັນທີ. ມະນຸດບໍ່ມີຫຍັງໃຫ້ໂອ້ອວດ ຍ້ອນບໍ່ວ່າຄວາມຮູ້ຂອງມະນຸດໃນປັດຈຸບັນຈະສູງສໍ່າໃດກໍຕາມ, ບໍ່ວ່າປະສົບການຂອງເຂົາຈະເລິກເຊິ່ງສໍ່າໃດກໍຕາມ, ເຂົາກໍບໍ່ສາມາດຕັດຂາດຈາກພາລະກິດຂອງພຣະເຈົ້າໄດ້, ຍ້ອນການປະຕິບັດຂອງມະນຸດ ແລະ ສິ່ງທີ່ເຂົາຄວນ

ສະແຫວງຫາໃນຄວາມເຊື່ອຂອງພຣະເຈົ້າ ແມ່ນບໍ່ສາມາດຕັດຂາດຈາກນິມິດໄດ້. ໃນທຸກກໍລະນີຂອງພາລະກິດຂອງພຣະເຈົ້າແມ່ນມີນິມິດທີ່ມະນຸດຄວນຮູ້ ແລະ ຫຼັງຈາກສິ່ງເຫຼົ່ານີ້ ເງື່ອນໄຂອັນເໝາະສົມຈຶ່ງໄດ້ຮຽກຮ້ອງຈາກມະນຸດ. ຫາກບໍ່ມີນິມິດເຫຼົ່ານີ້ເປັນພື້ນຖານ, ມະນຸດກໍຈະບໍ່ສາມາດປະຕິບັດໄດ້ເລີຍ ຫຼື ມະນຸດຈະບໍ່ສາມາດຕິດຕາມພຣະເຈົ້າຢ່າງໝັ້ນຄົງໄດ້. ຖ້າມະນຸດບໍ່ຮູ້ຈັກພຣະເຈົ້າ ຫຼື ເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ແລ້ວທຸກສິ່ງທີ່ມະນຸດເຮັດກໍສູນເປົ່າ ແລະ ບໍ່ສາມາດຮັບການຍິນຍອມຈາກພຣະເຈົ້າໄດ້. ບໍ່ວ່າພອນຂອງມະນຸດຈະມີຫຼາຍສໍ່າໃດກໍຕາມ, ເຂົາກໍຍັງບໍ່ສາມາດຕັດຂາດຈາກພາລະກິດຂອງພຣະເຈົ້າ ແລະ ການນໍາພາຂອງພຣະເຈົ້າໄດ້. ບໍ່ວ່າການກະທໍາຂອງມະນຸດຈະດີ ຫຼື ຫຼາຍສໍ່າໃດກໍຕາມ, ສິ່ງເຫຼົ່ານັ້ນກໍຍັງບໍ່ສາມາດແທນທີ່ພາລະກິດຂອງພຣະເຈົ້າໄດ້. ດ້ວຍເຫດນັ້ນ, ບໍ່ວ່າໃນສະຖານະການໃດກໍຕາມ ການປະຕິບັດຂອງມະນຸດກໍບໍ່ສາມາດຕັດຂາດຈາກນິມິດໄດ້. ຄົນທີ່ບໍ່ຍອມຮັບນິມິດໃໝ່ກໍບໍ່ມີການປະຕິບັດໃໝ່. ການປະຕິບັດຂອງພວກເຂົາບໍ່ມີສ່ວນກ່ຽວຂ້ອງກັບຄວາມຈິງ ເພາະພວກເຂົາປະຕິບັດຕາມຄໍາສັ່ງສອນ ແລະ ຮັກສາພຣະບັນຍັດທີ່ຕາຍແລ້ວ; ພວກເຂົາບໍ່ມີນິມິດໃໝ່ເລີຍ ແລະ ຜົນຕາມມາກໍຄື ພວກເຂົາບໍ່ໄດ້ນໍາສິ່ງໃດໃນຍຸກໃໝ່ເຂົ້າສູ່ການປະຕິບັດ. ພວກເຂົາໄດ້ສູນເສຍນິມິດ ແລະ ການເຮັດແບບນັ້ນ ພວກເຂົາຍັງໄດ້ສູນເສຍພາລະກິດຂອງພຣະວິນຍານບໍລິສຸດ ແລະ ໄດ້ສູນເສຍຄວາມຈິງ. ຄົນທີ່ປາສະຈາກຄວາມຈິງແມ່ນລູກຫຼານຂອງຄວາມໂງ່, ພວກເຂົາແມ່ນຮູບຮ່າງຂອງຊາຕານ. ບໍ່ວ່າຄົນໜຶ່ງຈະເປັນຄົນປະເພດໃດກໍຕາມ, ພວກເຂົາແມ່ນບໍ່ສາມາດປາສະຈາກນິມິດແຫ່ງພາລະກິດຂອງພຣະເຈົ້າໄດ້ ແລະ ບໍ່ສາມາດສູນເສຍການສະຖິດຂອງພຣະວິນຍານບໍລິສຸດໄດ້; ທັນທີທີ່ຜູ້ຄົນສູນເສຍນິມິດ, ພວກເຂົາກໍຈະຕົກລົງສູ່ດິນແດນມໍລະນາທັນທີ ແລະ ດໍາລົງຊີວິດຢູ່ທ່າມກາງຄວາມມືດ. ຜູ້ຄົນທີ່ປາສະຈາກນິມິດແມ່ນຄົນທີ່ຕິດຕາມພຣະເຈົ້າຢ່າງໂງ່ຈ້າ, ພວກເຂົາເປັນຄົນທີ່ຂາດພາລະກິດຂອງພຣະວິນຍານບໍລິສຸດ ແລະ ພວກເຂົາດໍາລົງຊີວິດຢູ່ໃນນະຮົກ. ຄົນປະເພດດັ່ງກ່າວບໍ່ສະແຫວງຫາຄວາມຈິງ ແຕ່ກົງກັນຂ້າມ ແຂວນຊື່ຂອງພຣະເຈົ້າຄືກັບແຜ່ນປ້າຍໂຄສະນາ. ຄົນທີ່ບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ, ຄົນທີ່ບໍ່ຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດ, ຄົນທີ່ບໍ່ຮູ້ຈັກສາມຂັ້ນຕອນຂອງພາລະກິດໃນການຄຸ້ມຄອງທັງໝົດຂອງພຣະເຈົ້າ, ພວກເຂົາແມ່ນບໍ່ຮູ້ຈັກນິມິດ ແລະ ຍັງປາສະຈາກຄວາມຈິງອີກດ້ວຍ. ແລ້ວຄົນທີ່ບໍ່ມີຄວາມຈິງບໍ່ແມ່ນລ້ວນແຕ່ເປັນຄົນຊົ່ວບໍ? ຄົນທີ່ເຕັມໃຈນໍາເອົາຄວາມຈິງເຂົ້າສູ່ການປະຕິບັດ, ຄົນທີ່ເຕັມໃຈສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າ ແລະ ຄົນທີ່ຮ່ວມມືກັບພຣະເຈົ້າຢ່າງແທ້ຈິງ ຄືຄົນທີ່ມີນິມິດເປັນພື້ນຖານ. ພວກເຂົາໄດ້ຮັບການຍິນຍອມຈາກພຣະເຈົ້າ ເພາະພວກເຂົາຮ່ວມມືກັບພຣະເຈົ້າ ແລະ ມັນຄືການຮ່ວມມືນີ້ເອງທີ່ມະນຸດຄວນນໍາເຂົ້າສູ່ການປະຕິບັດ.

ມີຫຼາຍເສັ້ນທາງໃຫ້ປະຕິບັດໃນນິມິດ. ຄວາມຮຽກຮ້ອງແທ້ຈິງຈາກມະນຸດກໍມີຢູ່ພາຍໃນນິມິດນີ້ເຊັ່ນກັນ, ເຊັ່ນດຽວກັບພາລະກິດຂອງພຣະເຈົ້າທີ່ມະນຸດຄວນຮູ້. ທີ່ຜ່ານມາ, ໃນລະຫວ່າງການຊຸມນຸມພິເສດ ຫຼື ການຊຸມນຸມໃຫຍ່ທີ່ໄດ້ຖືກຈັດຂຶ້ນໃນສະຖານທີ່ຕ່າງໆ, ມີພຽງແຕ່ການກ່າວເຖິງດ້ານໜຶ່ງຂອງເສັ້ນທາງແຫ່ງການປະຕິບັດເທົ່ານັ້ນ. ເຊິ່ງການປະຕິບັດດັ່ງກ່າວແມ່ນສິ່ງທີ່ຖືກນໍາເຂົ້າສູ່ການປະຕິບັດ

ໃນລະຫວ່າງຍຸກແຫ່ງພຣະຄຸນ ແລະ ເກືອບຈະບໍ່ກ່ຽວຂ້ອງກັບຄວາມຮູ້ກ່ຽວກັບພຣະເຈົ້າເລີຍ ຍ້ອນນິມິດໃນຍຸກແຫ່ງພຣະຄຸນເປັນພຽງນິມິດຂອງການຄຶງພຣະເຢຊູ ແລະ ບໍ່ມີນິມິດທີ່ຍິ່ງໃຫຍ່ໄປກວ່ານັ້ນ. ມະນຸດຄວນຮູ້ພຽງແຕ່ພາລະກິດແຫ່ງການໄຖ່ບາບມະນຸດຊາດຂອງພຣະອົງຜ່ານທາງການຄຶງກາງແຂນເທົ່ານັ້ນ ແລະ ສະນັ້ນ ໃນລະຫວ່າງຍຸກແຫ່ງພຣະຄຸນຈຶ່ງບໍ່ມີນິມິດອື່ນໃດໃຫ້ມະນຸດຮູ້ຈັກເລີຍ. ໃນວິທີນີ້, ມະນຸດພຽງແຕ່ມີຄວາມຮູ້ເລັກນ້ອຍກ່ຽວກັບພຣະເຈົ້າ ແລະ ນອກຈາກຄວາມຮູ້ກ່ຽວກັບຄວາມຮັກ ແລະ ຄວາມເມດຕາຂອງພຣະເຢຊູແລ້ວ ກໍມີພຽງແຕ່ສິ່ງທຳມະດາ ແລະ ສິ່ງໜ້າເວດທະນາຈຳນວນເລັກນ້ອຍໃຫ້ເຂົານຳໄປປະຕິບັດ ເຊິ່ງເປັນສິ່ງທີ່ແຕກຕ່າງຈາກໃນປັດຈຸບັນຫຼາຍ. ໃນອະດີດ, ບໍ່ວ່າການຊຸມນຸມຂອງເຂົາຈະຢູ່ໃນຮູບແບບໃດກໍຕາມ, ມະນຸດກໍບໍ່ສາມາດກ່າວເຖິງຄວາມຮູ້ຕົວຈິງກ່ຽວກັບພາລະກິດຂອງພຣະເຈົ້າໄດ້, ແຮງໄກທີ່ຈະມີຄົນໃດສາມາດກ່າວໄດ້ຢ່າງຊັດເຈນເຖິງເສັ້ນທາງຂອງການປະຕິບັດທີ່ເໝາະສົມທີ່ສຸດສຳລັບມະນຸດທີ່ຈະເຂົ້າສູ່. ມະນຸດມີພຽງແຕ່ເພີ່ມລາຍລະອຽດທຳມະດາເລັກນ້ອຍເຂົ້າໃນພື້ນຖານຂອງຄວາມອົດກັ້ນ ແລະ ຄວາມອົດທົນເທົ່ານັ້ນ; ບໍ່ມີການປ່ຽນແປງໃນແກ່ນແທ້ຂອງການປະຕິບັດຂອງເຂົາເລີຍ, ຍ້ອນພາຍໃນຍຸກດັ່ງກ່າວນັ້ນ ພຣະເຈົ້າບໍ່ໄດ້ປະຕິບັດພາລະກິດໃໝ່ໃດໆ ແລະ ເງື່ອນໄຂດຽວທີ່ພຣະອົງຮຽກຮ້ອງຈາກມະນຸດກໍຄືຄວາມອົດກັ້ນ ແລະ ຄວາມອົດທົນ ຫຼື ການແບກໄມ້ກາງແຂນ. ນອກຈາກການປະຕິບັດດັ່ງກ່າວແລ້ວ, ບໍ່ມີນິມິດທີ່ສູງສົ່ງກວ່າການຄຶງກາງແຂນຂອງພຣະເຢຊູ. ທີ່ຜ່ານມາ, ບໍ່ມີການກ່າວເຖິງນິມິດອື່ນ ເພາະພຣະເຈົ້າບໍ່ໄດ້ປະຕິບັດພາລະກິດເປັນຈຳນວນຫຼວງຫຼາຍ ແລະ ເພາະພຣະອົງພຽງແຕ່ຮຽກຮ້ອງບາງຢ່າງຈາກມະນຸດເທົ່ານັ້ນ. ໃນວິທີນີ້, ບໍ່ວ່າມະນຸດຈະເຮັດຫຍັງກໍຕາມ, ເຂົາກໍບໍ່ສາມາດຝ່າຝືນຂອບເຂດນີ້ໄດ້ ເຊິ່ງເປັນຂອບເຂດທີ່ທຳມະດາ ແລະ ບໍ່ເລິກເຊິ່ງໃຫ້ມະນຸດນຳໄປປະຕິບັດ. ໃນປັດຈຸບັນ ເຮົາກ່າວເຖິງນິມິດອື່ນ ເພາະໃນປັດຈຸບັນ ໄດ້ມີການປະຕິບັດພາລະກິດຫຼາຍຂຶ້ນ, ພາລະກິດທີ່ຫຼາຍກວ່າພາລະກິດໃນຍຸກແຫ່ງພຣະບັນຍັດ ແລະ ຍຸກແຫ່ງພຣະຄຸນເປັນສອງສາມເທົ່າ. ເງື່ອນໄຂຂອງມະນຸດກໍສູງກວ່າເງື່ອນໄຂທີ່ຢູ່ໃນຍຸກອະດີດເປັນສອງສາມເທົ່າເຊັ່ນກັນ. ຖ້າມະນຸດບໍ່ສາມາດຮູ້ຈັກພາລະກິດດັ່ງກ່າວໄດ້ຢ່າງສົມບູນ, ແລ້ວມັນກໍຈະບໍ່ມີຄວາມໝາຍຫຍັງຫຼາຍເລີຍ; ສາມາດເວົ້າໄດ້ວ່າ ມະນຸດຈະພົບຄວາມຫຍຸ້ງຍາກໃນການຮູ້ຈັກພາລະກິດດັ່ງກ່າວຢ່າງສົມບູນ ພວກຖ້າເຂົາບໍ່ອຸທິດຄວາມພະຍາຍາມຊົ່ວຊີວິດທັງໝົດຕໍ່ພາລະກິດນັ້ນ. ໃນພາລະກິດແຫ່ງການເອົາຊະນະ, ການເວົ້າເຖິງແຕ່ເສັ້ນທາງຂອງການປະຕິບັດຈະເຮັດໃຫ້ການເອົາຊະນະມະນຸດເປັນໄປບໍ່ໄດ້. ການເວົ້າເຖິງນິມິດພຽງແຕ່ຢ່າງດຽວ ໂດຍປາສະຈາກເງື່ອນໄຂຂອງມະນຸດ ກໍຈະເຮັດໃຫ້ການເອົາຊະນະມະນຸດເປັນໄປບໍ່ໄດ້ເຊັ່ນກັນ. ຖ້າບໍ່ມີຫຍັງທີ່ຈະກ່າວເຖິງນອກຈາກເສັ້ນທາງຂອງການປະຕິບັດ, ແລ້ວມັນກໍເປັນໄປບໍ່ໄດ້ທີ່ຈະໂຈມຕີຈຸດຕາຍຂອງມະນຸດ ຫຼື ກຳຈັດແນວຄິດຂອງມະນຸດໄດ້ ແລະ ເຊັ່ນດຽວກັນ ມັນກໍຈະເປັນໄປບໍ່ໄດ້ທີ່ຈະເອົາຊະນະມະນຸດໄດ້ຢ່າງສິ້ນເຊີງ. ນິມິດຄືເຄື່ອງມືສຳຄັນໃນການເອົາຊະນະມະນຸດ, ແຕ່ຖ້າບໍ່ມີເສັ້ນທາງຂອງການປະຕິບັດນອກຈາກນິມິດ, ແລ້ວມະນຸດກໍຈະບໍ່ມີຫົນທາງໃນການຕິດຕາມ, ແຮງໄກທີ່ເຂົາຈະມີວິທີທາງເຂົ້າສູ່. ນີ້ແມ່ນຫຼັກການແຫ່ງພາລະກິດຂອງພຣະເຈົ້າຕັ້ງແຕ່ຕົ້ນຈົນຈົບ: ໃນນິມິດ ແມ່ນມີສິ່ງທີ່ສາມາດນຳເຂົ້າ

ສູ່ການປະຕິບັດ ແລະ ເຊັ່ນດຽວກັນ ນອກຈາກການປະຕິບັດກໍຈະມີນິມິດ. ລະດັບຂອງການປ່ຽນແປງໃນຊີວິດຂອງມະນຸດ ແລະ ອຸປະນິໄສຂອງເຂົາຂຶ້ນຢູ່ກັບການປ່ຽນແປງໃນນິມິດ. ຖ້າມະນຸດພຽງແຕ່ເພິ່ງພາຄວາມພະຍາຍາມຂອງເຂົາເອງ, ແລ້ວມັນກໍເປັນໄປບໍ່ໄດ້ທີ່ຈະໃຫ້ເຂົາບັນລຸການປ່ຽນແປງໃດໆໃນລະດັບຍິ່ງໃຫຍ່ໄດ້. ນິມິດກ່າວເຖິງພາລະກິດຂອງພຣະເຈົ້າເອງ ແລະ ການຄຸ້ມຄອງຂອງພຣະເຈົ້າ. ການປະຕິບັດໝາຍເຖິງເສັ້ນທາງແຫ່ງການປະຕິບັດຂອງມະນຸດ ແລະ ໝາຍເຖິງຫົນທາງແຫ່ງການມີຊີວິດຢູ່ຂອງມະນຸດ; ໃນການຄຸ້ມຄອງທັງໝົດຂອງພຣະເຈົ້າ, ຄວາມສຳພັນລະຫວ່າງນິມິດ ແລະ ການປະຕິບັດແມ່ນຄວາມສຳພັນລະຫວ່າງພຣະເຈົ້າ ແລະ ມະນຸດ. ຖ້າບໍ່ມີນິມິດ ຫຼື ຖ້າກ່າວເຖິງນິມິດ ແຕ່ບໍ່ກ່າວເຖິງການປະຕິບັດ ຫຼື ຖ້າມີພຽງແຕ່ນິມິດ ແລະ ບໍ່ມີການປະຕິບັດຂອງມະນຸດ, ແລ້ວສິ່ງດັ່ງກ່າວກໍຈະບໍ່ຖືວ່າເປັນການຄຸ້ມຄອງຂອງພຣະເຈົ້າ, ແຮງໄກທີ່ຈະສາມາດເວົ້າໄດ້ວ່າ ພາລະກິດຂອງພຣະເຈົ້າແມ່ນເພື່ອມະນຸດຊາດ; ໃນວິທີນີ້, ບໍ່ພຽງແຕ່ໜ້າທີ່ຂອງມະນຸດຈະຖືກລຶບລ້າງເທົ່ານັ້ນ, ແຕ່ມັນຈະເປັນການປະຕິເສດຈຸດປະສົງແຫ່ງພາລະກິດຂອງພຣະເຈົ້າອີກດ້ວຍ. ຕັ້ງແຕ່ຕົ້ນຈົນຈົບ, ຖ້າມະນຸດພຽງແຕ່ຖືກຮຽກຮ້ອງໃຫ້ປະຕິບັດ ໂດຍບໍ່ມີສ່ວນຮ່ວມຂອງພາລະກິດຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນ ຖ້າມະນຸດບໍ່ໄດ້ຖືກຮຽກຮ້ອງໃຫ້ຮູ້ຈັກພາລະກິດຂອງພຣະເຈົ້າ, ແລ້ວແຮງໄກພາລະກິດດັ່ງກ່າວຈະສາມາດເອີ້ນໄດ້ວ່າເປັນ ການຄຸ້ມຄອງຂອງພຣະເຈົ້າ. ຖ້າມະນຸດບໍ່ຮູ້ຈັກພຣະເຈົ້າ ແລະ ບໍ່ມີຄວາມຮູ້ກ່ຽວກັບຄວາມປະສົງຂອງພຣະເຈົ້າ ແລະ ດຳເນີນການປະຕິບັດຂອງເຂົາຢ່າງຫຼັບຫູຫຼັບຕາດ້ວຍວິທີທີ່ເລື່ອນລອຍ ແລະ ບໍ່ມີຕົວຕົນ, ແລ້ວເຂົາກໍຈະບໍ່ກາຍມາເປັນສິ່ງຖືກສ້າງທີ່ມີຄຸນສົມບັດຢ່າງສົມບູນຈັກເທື່ອ. ສະນັ້ນ ທັງສອງສິ່ງນີ້ແມ່ນຈຳເປັນຫຼາຍ. ຖ້າມີພຽງແຕ່ພາລະກິດຂອງພຣະເຈົ້າ ເຊິ່ງໝາຍຄວາມວ່າ ຖ້າມີພຽງແຕ່ນິມິດ ແລະ ຖ້າບໍ່ມີການຮ່ວມມື ຫຼື ການປະຕິບັດໂດຍມະນຸດ, ສິ່ງດັ່ງກ່າວກໍຈະບໍ່ສາມາດເອີ້ນໄດ້ວ່າ ເປັນການຄຸ້ມຄອງຂອງພຣະເຈົ້າ. ຖ້າມີພຽງແຕ່ການປະຕິບັດ ແລະ ທາງເຂົ້າຂອງມະນຸດ, ແລ້ວບໍ່ວ່າເສັ້ນທາງທີ່ມະນຸດເຂົ້າສູ່ນັ້ນຈະສູງສົ່ງໃດກໍຕາມ, ສິ່ງນີ້ກໍຮັບບໍ່ໄດ້ເຊັ່ນກັນ. ທາງເຂົ້າຂອງມະນຸດຕ້ອງປ່ຽນແປງໄປຕາມບາດກ້າວພ້ອມກັບພາລະກິດ ແລະ ນິມິດເທື່ອລະໜ້ອຍ; ມັນບໍ່ສາມາດປ່ຽນແປງໂດຍອຳເພີໃຈ. ຫຼັກການຂອງການປະຕິບັດຂອງມະນຸດບໍ່ໄດ້ເປັນອິດສະຫຼະ ແລະ ບໍ່ແມ່ນບໍ່ມີການບັງຄັບ, ແຕ່ຖືກກຳນົດຢູ່ພາຍໃນຂອບເຂດໃດໜຶ່ງ. ຫຼັກການດັ່ງກ່າວປ່ຽນແປງໄປຕາມບາດກ້າວພ້ອມໆກັບນິມິດຂອງພາລະກິດ. ສະນັ້ນ ການຄຸ້ມຄອງຂອງພຣະເຈົ້າຈຶ່ງຂຶ້ນຢູ່ກັບພາລະກິດຂອງພຣະເຈົ້າ ແລະ ການປະຕິບັດຂອງມະນຸດໃນທີ່ສຸດ.

ພາລະກິດການຄຸ້ມຄອງເກີດຂຶ້ນຍ້ອນມະນຸດຊາດເທົ່ານັ້ນ ເຊິ່ງໝາຍຄວາມວ່າ ມັນເກີດຂຶ້ນຍ້ອນການມີຢູ່ຂອງມະນຸດເທົ່ານັ້ນ. ບໍ່ມີການຄຸ້ມຄອງກ່ອນໜ້າມະນຸດຊາດ ຫຼື ໃນຕອນເລີ່ມຕົ້ນ ເມື່ອສະຫວັນ ແລະ ແຜ່ນດິນໂລກ ແລະ ສິ່ງທັງປວງຖືກສ້າງຂຶ້ນ. ໃນພາລະກິດທັງໝົດຂອງພຣະເຈົ້າ, ຖ້າບໍ່ມີການປະຕິບັດທີ່ເປັນປະໂຫຍດຕໍ່ມະນຸດ ເຊິ່ງໝາຍຄວາມວ່າ ຖ້າພຣະເຈົ້າບໍ່ມີເງື່ອນໄຂທີ່ເໝາະສົມສຳລັບມະນຸດຊາດທີ່ເສື່ອມຊາມ (ໃນພາລະກິດທີ່ພຣະເຈົ້າປະຕິບັດ ຖ້າບໍ່ມີເສັ້ນທາງເໝາະສົມສຳລັບການປະຕິບັດຂອງມະນຸດ), ແລ້ວພາລະກິດນີ້ກໍຈະບໍ່ສາມາດເອີ້ນໄດ້ວ່າ ເປັນການຄຸ້ມຄອງຂອງ

ພຣະເຈົ້າ. ຖ້າພາລະກິດທັງໝົດຂອງພຣະເຈົ້າພຽງແຕ່ກ່ຽວພັນກັບການບອກມະນຸດຊາດທີ່ເສື່ອມຊາມເຖິງວິທີການປະຕິບັດຂອງພວກເຂົາ ແລະ ພຣະເຈົ້າບໍ່ປະຕິບັດກິດຈະການຂອງພຣະອົງເລີຍ ແລະ ບໍ່ໄດ້ສະແດງອຳນາດອັນຍິ່ງໃຫຍ່ ຫຼື ສະຕິປັນຍາຂອງພຣະອົງແມ່ນແຕ່ໜ້ອຍດຽວ, ແລ້ວບໍ່ວ່າເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຈາກມະນຸດຈະສູງສໍ່າໃດກໍຕາມ, ບໍ່ວ່າພຣະເຈົ້າຈະດຳລົງຊີວິດທ່າມກາງມະນຸດດົນສໍ່າໃດກໍຕາມ, ມະນຸດກໍຈະບໍ່ຮູ້ຫຍັງເລີຍກ່ຽວກັບອຸປະນິໄສຂອງພຣະເຈົ້າ; ຖ້າສິ່ງນັ້ນເປັນຄວາມຈິງ, ແລ້ວພາລະກິດປະເພດນີ້ກໍຍິ່ງບໍ່ສົມຄວນເອີ້ນວ່າເປັນການຄຸ້ມຄອງຂອງພຣະເຈົ້າ. ເວົ້າຢ່າງງ່າຍໆກໍຄື ພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າເປັນພາລະກິດທີ່ພຣະເຈົ້າປະຕິບັດ ແລະ ເປັນພາລະກິດທັງໝົດທີ່ຜູ້ຄົນທີ່ຖືກພຣະເຈົ້າຮັບເອົາ ປະຕິບັດພາຍໃຕ້ການນຳພາຂອງພຣະເຈົ້າ. ພາລະກິດດັ່ງກ່າວສາມາດສະຫຼຸບໄດ້ວ່າເປັນການຄຸ້ມຄອງ. ເວົ້າອີກຢ່າງໜຶ່ງກໍຄື, ພາລະກິດຂອງພຣະເຈົ້າທ່າມກາງມະນຸດພ້ອມທັງການຮ່ວມມືຂອງພຣະອົງກັບຄົນທີ່ຕິດຕາມພຣະອົງ ທັງໝົດນີ້ເອີ້ນໄດ້ວ່າ ເປັນການຄຸ້ມຄອງ. ໃນນີ້, ພາລະກິດຂອງພຣະເຈົ້າແມ່ນເອີ້ນວ່ານິມິດ ແລະ ການຮ່ວມມືຂອງມະນຸດແມ່ນເອີ້ນວ່າການປະຕິບັດ. ຍິ່ງພາລະກິດຂອງພຣະເຈົ້າສູງສົ່ງຫຼາຍສໍ່າໃດ (ນັ້ນກໍຄື ຍິ່ງນິມິດສູງສົ່ງຫຼາຍສໍ່າໃດ), ອຸປະນິໄສຂອງພຣະເຈົ້າກໍຍິ່ງຖືກເຮັດໃຫ້ແຈ່ມແຈ້ງຕໍ່ມະນຸດຫຼາຍສໍ່ານັ້ນ ແລະ ມັນຍິ່ງຂັດກັບແນວຄິດຂອງມະນຸດຫຼາຍສໍ່ານັ້ນ ແລະ ການປະຕິບັດ ແລະ ການຮ່ວມມືຂອງມະນຸດກໍຍິ່ງສູງສົ່ງຫຼາຍສໍ່ານັ້ນ. ຍິ່ງເງື່ອນໄຂຂອງມະນຸດສູງຫຼາຍສໍ່າໃດ, ພາລະກິດຂອງພຣະເຈົ້າກໍຂັດກັບແນວຄິດຂອງມະນຸດຫຼາຍສໍ່ານັ້ນ, ຜົນຕາມມາກໍຄື ການທົດລອງຂອງມະນຸດ ແລະ ມາດຕະຖານທີ່ເຂົາຕ້ອງບັນລຸກໍສູງຂຶ້ນເຊັ່ນກັນ. ຜົນສະຫຼຸບຂອງພາລະກິດນີ້ກໍຄື ທຸກນິມິດຈະຖືກເຮັດໃຫ້ສຳເລັດ ແລະ ສິ່ງທີ່ມະນຸດຈຳເປັນຕ້ອງນຳເຂົ້າສູ່ການປະຕິບັດກໍຈະໄປເຖິງຈຸດສູງສຸດຂອງຄວາມສົມບູນ. ນີ້ຍັງເປັນເວລາທີ່ແຕ່ລະຄົນຖືກຈັດແບ່ງອອກຕາມປະເພດຂອງໃຜລາວ ຍ້ອນສິ່ງທີ່ມະນຸດຈຳເປັນຕ້ອງຮູ້ກໍຈະຖືກສະແດງໃຫ້ກັບມະນຸດ. ສະນັ້ນ ເມື່ອນິມິດຕ່າງໆໄປເຖິງຈຸດສູງສຸດ, ພາລະກິດກໍຈະເຂົ້າສູ່ຈຸດສິ້ນສຸດຕາມນັ້ນ ແລະ ການປະຕິບັດຂອງມະນຸດກໍຈະໄປເຖິງຈຸດສູງສຸດເຊັ່ນກັນ. ການປະຕິບັດຂອງມະນຸດແມ່ນອີງຕາມພາລະກິດຂອງພຣະເຈົ້າ ແລະ ການຄຸ້ມຄອງຂອງພຣະເຈົ້ານັ້ນແມ່ນຖືກສະແດງອອກຢ່າງສົມບູນຍ້ອນການປະຕິບັດຂອງມະນຸດ ແລະ ການຮ່ວມມືຂອງມະນຸດ. ມະນຸດແມ່ນຊິ້ນຍອດໃນພາລະກິດຂອງພຣະເຈົ້າ ແລະ ເປັນເປົ້າໝາຍຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າທັງໝົດ ແລະ ຍັງເປັນຜົນຜະລິດຂອງການຄຸ້ມຄອງທັງໝົດຂອງພຣະເຈົ້າອີກດ້ວຍ. ຖ້າພຣະເຈົ້າປະຕິບັດພາລະກິດພຽງຜູ້ດຽວ ໂດຍບໍ່ມີການຮ່ວມມືຂອງມະນຸດ, ແລ້ວກໍຈະບໍ່ມີຫຍັງທີ່ສາມາດເຮັດໜ້າທີ່ເປັນແກ້ວຜະລຶກຂອງພາລະກິດທັງໝົດຂອງພຣະເຈົ້າ ແລະ ໃນທີ່ສຸດ ກໍຈະບໍ່ມີຄວາມໝາຍແມ່ນແຕ່ໜ້ອຍດຽວໃນການຄຸ້ມຄອງຂອງພຣະເຈົ້າ. ນອກຈາກພາລະກິດຂອງພຣະເຈົ້າແລ້ວ, ມີພຽງການເລືອກເອົາເປົ້າໝາຍຢ່າງເໝາະສົມເທົ່ານັ້ນເພື່ອສຳແດງເຖິງພາລະກິດຂອງພຣະອົງ ແລະ ພິສູດອຳນາດອັນຍິ່ງໃຫຍ່ ແລະ ສະຕິປັນຍາ ພຣະເຈົ້າຈຶ່ງສາມາດບັນລຸຈຸດປະສົງແຫ່ງການຄຸ້ມຄອງຂອງພຣະເຈົ້າ ແລະ ບັນລຸຈຸດປະສົງແຫ່ງການນຳໃຊ້ພາລະກິດນີ້ທັງໝົດເພື່ອເອົາຊະນະຊາຕານໂດຍສິ້ນເຊີງ. ດ້ວຍເຫດນັ້ນ ມະນຸດຈຶ່ງເປັນສ່ວນໜຶ່ງທີ່ຂາດບໍ່ໄດ້ໃນພາລະກິດແຫ່ງການ

ຄຸ້ມຄອງຂອງພຣະເຈົ້າ ແລະ ມະນຸດກໍເປັນພຽງຜູ້ດຽວທີ່ສາມາດເຮັດໃຫ້ການຄຸ້ມຄອງຂອງພຣະເຈົ້າເກີດໝາກຜົນ ແລະ ບັນລຸຈຸດປະສົງສຸດທ້າຍຂອງພາລະກິດ; ນອກຈາກມະນຸດແລ້ວ ບໍ່ມີສິ່ງມີຊີວິດອື່ນໃດທີ່ສາມາດຮັບບົດບາດດັ່ງກ່າວນີ້ໄດ້. ຖ້າມະນຸດຕ້ອງກາຍເປັນແກ້ວຜະລຶກທີ່ແທ້ຈິງຂອງພາລະກິດແຫ່ງການຄຸ້ມຄອງ, ແລ້ວຄວາມບໍ່ເຊື່ອຟັງຂອງມະນຸດຊາດທີ່ເສື່ອມຊາມຕ້ອງຖືກກຳຈັດທັງໝົດ. ສິ່ງນີ້ຮຽກຮ້ອງໃຫ້ມະນຸດປະຕິບັດຢ່າງເໝາະສົມໃນເວລາທີ່ແຕກຕ່າງກັນ ແລະ ໃຫ້ພຣະເຈົ້າປະຕິບັດພາລະກິດທີ່ສອດຄ່ອງກັນທ່າມກາງມະນຸດ. ໃນວິທີນີ້ເທົ່ານັ້ນ ຈຶ່ງຈະຮັບເອົາກຸ່ມຄົນທີ່ເປັນແກ້ວຜະລຶກຂອງພາລະກິດແຫ່ງການຄຸ້ມຄອງໄດ້ໃນທີ່ສຸດ. ພາລະກິດຂອງພຣະເຈົ້າທ່າມກາງມະນຸດບໍ່ສາມາດເປັນພະຍານໃຫ້ກັບພຣະເຈົ້າເອງພຽງຜ່ານທາງພາລະກິດຂອງພຣະເຈົ້າເທົ່ານັ້ນ; ເພື່ອບັນລຸຜົນໃນສິ່ງນີ້, ການເປັນພະຍານດັ່ງກ່າວຈຳເປັນຕ້ອງມີມະນຸດທີ່ມີຊີວິດຢູ່ທີ່ເໝາະສົມສຳລັບພາລະກິດຂອງພຣະອົງ. ພຣະເຈົ້າຈະປະຕິບັດພາລະກິດໃນຄົນເຫຼົ່ານີ້ກ່ອນ ເຊິ່ງພາລະກິດຂອງພຣະອົງຈຶ່ງຈະໄດ້ສະແດງອອກຜ່ານທາງພວກເຂົາ ແລະ ດ້ວຍເຫດນັ້ນ ການເປັນພະຍານດັ່ງກ່າວຂອງພຣະອົງກໍຈະເກີດຂຶ້ນທ່າມກາງສິ່ງຖືກສ້າງທັງປວງ. ດ້ວຍວິທີນີ້, ພຣະເຈົ້າກໍຈະບັນລຸຈຸດປະສົງໃນພາລະກິດຂອງພຣະອົງ. ພຣະເຈົ້າຈະບໍ່ປະຕິບັດພາລະກິດຜູ້ດຽວເພື່ອເອົາຊະນະຊາຕານ ຍ້ອນພຣະອົງບໍ່ສາມາດເປັນພະຍານໃຫ້ກັບພຣະອົງເອງທ່າມກາງສິ່ງຖືກສ້າງທັງປວງໂດຍກົງໄດ້. ຖ້າພຣະອົງເຮັດແບບນັ້ນ, ມັນກໍເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ມະນຸດເຊື່ອ, ສະນັ້ນ ພຣະເຈົ້າຈຶ່ງຕ້ອງປະຕິບັດພາລະກິດໃນມະນຸດເພື່ອເອົາຊະນະພວກເຂົາ ແລະ ມີແຕ່ເມື່ອນັ້ນ ພຣະອົງຈຶ່ງຈະສາມາດໄດ້ຮັບການເປັນພະຍານທ່າມກາງສິ່ງຖືກສ້າງທັງປວງ. ຖ້າພຣະເຈົ້າປະຕິບັດພາລະກິດພຽງຜູ້ດຽວ ແລະ ບໍ່ມີການຮ່ວມມືຈາກມະນຸດ ຫຼື ຖ້າມະນຸດບໍ່ຈຳເປັນຕ້ອງຮ່ວມມື, ແລ້ວມະນຸດກໍຈະບໍ່ສາມາດຮູ້ຈັກອຸປະນິໄສຂອງພຣະເຈົ້າໄດ້ຈັກເທື່ອ ແລະ ຈະບໍ່ຮູ້ຈັກຄວາມປະສົງຂອງພຣະເຈົ້າຕະຫຼອດໄປ; ແລ້ວພາລະກິດຂອງພຣະເຈົ້າກໍບໍ່ສາມາດເອີ້ນໄດ້ວ່າເປັນພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ. ຖ້າມະນຸດພຽງແຕ່ພະຍາຍາມ ແລະ ສະແຫວງຫາ ແລະ ປະຕິບັດພາລະກິດຢ່າງໜັກໂດຍບໍ່ມີການເຂົ້າໃຈພາລະກິດຂອງພຣະເຈົ້າ, ແລ້ວມະນຸດຈະຫຼິ້ນຕະຫຼົກ. ຫາກປາສະຈາກພາລະກິດຂອງພຣະວິນຍານບໍລິສຸດ, ສິ່ງທີ່ມະນຸດເຮັດກໍມາຈາກຊາຕານ, ເຂົາເປັນຄົນກະບົດ ແລະ ເປັນຄົນຊົ່ວ; ຊາຕານຖືກສະແດງອອກໃນທຸກສິ່ງທີ່ປະຕິບັດໂດຍມະນຸດຊາດອັນທີ່ເສື່ອມຊາມ ແລະ ບໍ່ມີຫຍັງທີ່ສອດຄ່ອງກັບພຣະເຈົ້າເລີຍ ແລະ ທຸກສິ່ງລ້ວນແລ້ວແຕ່ເປັນການສະແດງອອກຂອງຊາຕານ. ທຸກສິ່ງທີ່ກ່າວເຖິງບໍ່ແມ່ນນິມິດ ແລະ ການປະຕິບັດ. ບົນພື້ນຖານຂອງນິມິດ, ມະນຸດຄົ້ນພົບການປະຕິບັດ ແລະ ເສັ້ນທາງແຫ່ງຄວາມເຊື່ອຟັງ, ເພື່ອວ່າເຂົາຈະໄດ້ປະຖິ້ມແນວຄິດຂອງເຂົາ ແລະ ຮັບເອົາສິ່ງເຫຼົ່ານັ້ນທີ່ເຂົາບໍ່ໄດ້ມີມາກ່ອນ. ພຣະເຈົ້າຮຽກຮ້ອງໃຫ້ມະນຸດຮ່ວມມືກັບພຣະອົງ, ໃຫ້ມະນຸດຍອມຮັບເອົາເງື່ອນໄຂຂອງພຣະອົງຢ່າງສົມບູນ ແລະ ມະນຸດຮຽກຮ້ອງເພື່ອປະຈັກພາລະກິດທີ່ພຣະເຈົ້າເອງປະຕິບັດ, ເພື່ອພະເຊີນກັບອຳນາດອິດຊິລິດທານຸພາບສູງສຸດຂອງພຣະເຈົ້າ ແລະ ເພື່ອຮູ້ຈັກອຸປະນິໄສຂອງພຣະເຈົ້າ. ສະຫຼຸບກໍຄື ສິ່ງເຫຼົ່ານີ້ແມ່ນການຄຸ້ມຄອງຂອງພຣະເຈົ້າ. ການຢູ່ຮ່ວມກັນລະຫວ່າງພຣະເຈົ້າກັບມະນຸດແມ່ນການຄຸ້ມຄອງ ແລະ ການຄຸ້ມຄອງທີ່ຍິ່ງໃຫຍ່ທີ່ສຸດ.

ສິ່ງທີ່ກ່ຽວພັນກັບນິມິດຫຼັກໆແມ່ນໝາຍເຖິງພາລະກິດຂອງພຣະເຈົ້າເອງ ແລະ ສິ່ງທີ່ກ່ຽວພັນກັບການປະຕິບັດແມ່ນເຮັດໂດຍມະນຸດ ແລະ ບໍ່ໄດ້ມີສ່ວນກ່ຽວຂ້ອງຫຍັງກັບພຣະເຈົ້າ. ພາລະກິດຂອງພຣະເຈົ້າຖືກເຮັດໃຫ້ສຳເລັດໂດຍພຣະເຈົ້າເອງ ແລະ ການປະຕິບັດຂອງມະນຸດກໍຖືກບັນລຸໂດຍມະນຸດເອງ. ສິ່ງທີ່ພຣະເຈົ້າເອງຄວນປະຕິບັດບໍ່ຈຳເປັນຕ້ອງໃຫ້ມະນຸດປະຕິບັດ ແລະ ສິ່ງທີ່ມະນຸດຄວນປະຕິບັດກໍບໍ່ກ່ຽວຂ້ອງກັບພຣະເຈົ້າເລີຍ. ເຊິ່ງພາລະກິດຂອງພຣະເຈົ້າແມ່ນພັນທະກິດຂອງພຣະອົງເອງ ແລະ ບໍ່ກ່ຽວຂ້ອງກັບມະນຸດ. ພາລະກິດນີ້ບໍ່ຈຳເປັນຕ້ອງໃຫ້ມະນຸດປະຕິບັດ ແລະ ຍິ່ງໄປກວ່ານັ້ນມະນຸດຈະບໍ່ສາມາດປະຕິບັດພາລະກິດທີ່ພຣະເຈົ້າປະຕິບັດ. ສິ່ງທີ່ມະນຸດຈຳເປັນຕ້ອງປະຕິບັດຕ້ອງຖືກເຮັດໃຫ້ສຳເລັດໂດຍມະນຸດ ບໍ່ວ່າມັນຈະເປັນການເສຍສະຫຼະຊີວິດຂອງເຂົາ ຫຼື ເປັນການສົ່ງມອບເຂົາໃຫ້ກັບຊາຕານເພື່ອຢືນເປັນພະຍານ, ທຸກສິ່ງເຫຼົ່ານີ້ຕ້ອງຖືກເຮັດໃຫ້ສຳເລັດໂດຍມະນຸດ. ພຣະເຈົ້າເອງເຮັດສຳເລັດພາລະກິດທັງໝົດທີ່ພຣະອົງຄວນເຮັດ ແລະ ສິ່ງທີ່ມະນຸດຄວນເຮັດກໍໄດ້ສະແດງໃຫ້ກັບມະນຸດແລ້ວ ແລະ ພາລະກິດທີ່ເຫຼືອກໍຂຶ້ນຢູ່ກັບມະນຸດທີ່ຈະເຮັດ. ພຣະເຈົ້າບໍ່ປະຕິບັດພາລະກິດເພີ່ມ. ພຣະອົງພຽງແຕ່ປະຕິບັດພາລະກິດທີ່ຢູ່ພາຍໃນພັນທະກິດຂອງພຣະອົງເທົ່ານັ້ນ ແລະ ພຽງແຕ່ສະແດງໃຫ້ມະນຸດເຫັນເຖິງຫົນທາງ ແລະ ພຽງແຕ່ປະຕິບັດພາລະກິດເພື່ອເປີດຫົນທາງ ແລະ ບໍ່ໄດ້ປະຕິບັດພາລະກິດເພື່ອບຸກເບີກຫົນທາງ; ມະນຸດຄວນເຂົ້າໃຈສິ່ງນີ້. ການນຳຄວາມຈິງເຂົ້າສູ່ການປະຕິບັດໝາຍເຖິງການນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ ແລະ ນີ້ລ້ວນແລ້ວແຕ່ເປັນໜ້າທີ່ຂອງມະນຸດ, ເປັນສິ່ງທີ່ມະນຸດຄວນປະຕິບັດ ແລະ ບໍ່ກ່ຽວຂ້ອງກັບພຣະເຈົ້າເລີຍ. ຖ້າມະນຸດຮຽກຮ້ອງໃຫ້ພຣະເຈົ້າທົນທຸກຕໍ່ການທໍລະມານ ແລະ ການຫຼໍ່ຫຼອມໃນຄວາມຈິງເຊັ່ນດຽວກັນກັບມະນຸດ, ແລ້ວມະນຸດກໍກຳລັງບໍ່ເຊື່ອຟັງ. ພາລະກິດຂອງພຣະເຈົ້າແມ່ນເພື່ອປະຕິບັດພັນທະກິດຂອງພຣະອົງ ແລະ ໜ້າທີ່ຂອງມະນຸດແມ່ນເພື່ອເຊື່ອຟັງການນຳພາທັງໝົດຂອງພຣະເຈົ້າ ໂດຍບໍ່ມີການຕໍ່ຕ້ານໃດໆ. ສິ່ງທີ່ມະນຸດຕ້ອງບັນລຸ ເຂົາກໍຈຳເປັນຕ້ອງເຮັດໃຫ້ສຳເລັດ ບໍ່ວ່າພຣະເຈົ້າຈະປະຕິບັດພາລະກິດ ຫຼື ດຳລົງຊີວິດໃນລັກສະນະໃດກໍຕາມ. ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຮຽກຮ້ອງຈາກມະນຸດໄດ້ ເຊິ່ງໝາຍຄວາມວ່າມີພຽງພຣະເຈົ້າເທົ່ານັ້ນທີ່ສົມຄວນຮຽກຮ້ອງຈາກມະນຸດ. ມະນຸດບໍ່ຄວນມີທາງເລືອກອື່ນ, ບໍ່ຄວນເຮັດຫຍັງເລີຍ ນອກຈາກຍອມຮັບ ແລະ ປະຕິບັດທັງໝົດ; ນີ້ແມ່ນຄວາມຮູ້ສຶກທີ່ມະນຸດຄວນມີ. ຫຼັງຈາກພາລະກິດທີ່ພຣະເຈົ້າຄວນປະຕິບັດຖືກເຮັດໃຫ້ສຳເລັດ, ມະນຸດກໍຈຳເປັນຕ້ອງຜະເຊີນກັບມັນເທື່ອລະບາດກ້າວ. ໃນທີ່ສຸດ ຖ້າເມື່ອການຄຸ້ມຄອງທັງໝົດຂອງພຣະເຈົ້າຖືກເຮັດໃຫ້ສຳເລັດ, ແຕ່ມະນຸດຍັງບໍ່ໄດ້ເຮັດສິ່ງທີ່ພຣະເຈົ້າຮຽກຮ້ອງ, ແລ້ວມະນຸດກໍຄວນຖືກລົງໂທດ. ຖ້າມະນຸດບໍ່ປະຕິບັດຕາມເງື່ອນໄຂຂອງພຣະເຈົ້າ, ແລ້ວນີ້ກໍຍ້ອນຄວາມບໍ່ເຊື່ອຟັງຂອງມະນຸດ; ມັນບໍ່ໄດ້ໝາຍຄວາມວ່າພຣະເຈົ້າບໍ່ຮອບຄອບພໍໃນພາລະກິດຂອງພຣະອົງ. ທຸກຄົນທີ່ບໍ່ສາມາດນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ, ຄົນທີ່ບໍ່ສາມາດປະຕິບັດຕາມເງື່ອນໄຂຂອງພຣະເຈົ້າ ແລະ ຄົນທີ່ບໍ່ສາມາດມອບຄວາມຊື່ສັດຂອງພວກເຂົາ ແລະ ປະຕິບັດໜ້າທີ່ຂອງພວກເຂົາໄດ້, ພວກເຂົາທຸກຄົນລ້ວນແລ້ວແຕ່ຈະຖືກລົງໂທດທັງໝົດ. ໃນປັດຈຸບັນ, ສິ່ງທີ່ພວກເຈົ້າຈຳເປັນຕ້ອງບັນລຸບໍ່ແມ່ນການຮຽກຮ້ອງເພີ່ມ, ແຕ່ເປັນ

ໜ້າທີ່ຂອງມະນຸດ ແລະ ເປັນສິ່ງທີ່ທຸກຄົນຄວນປະຕິບັດ. ຖ້າພວກເຈົ້າບໍ່ສາມາດແມ່ນແຕ່ປະຕິບັດໜ້າທີ່ຂອງພວກເຈົ້າ ຫຼື ປະຕິບັດມັນໃຫ້ດີ, ແລ້ວພວກເຈົ້າບໍ່ໄດ້ກຳລັງນຳບັນຫາມາສູ່ຕົນເອງບໍ? ພວກເຈົ້າບໍ່ໄດ້ກຳລັງຊອກຫາຄວາມຕາຍບໍ? ພວກເຈົ້າຈະຍັງຄາດຫວັງອະນາຄົດ ແລະ ໂອກາດໄດ້ແນວໃດ? ພາລະກິດຂອງພຣະເຈົ້າແມ່ນເພື່ອມະນຸດຊາດ ແລະ ການຮ່ວມມືຂອງມະນຸດແມ່ນເພື່ອການຄຸ້ມຄອງຂອງພຣະເຈົ້າ. ຫຼັງຈາກທີ່ພຣະເຈົ້າໄດ້ສຳເລັດທຸກສິ່ງທີ່ພຣະອົງຄວນປະຕິບັດ, ມະນຸດກໍຈຳເປັນຕ້ອງເຕັມໃຈໃນການປະຕິບັດຂອງເຂົາ ແລະ ຮ່ວມມືກັບພຣະເຈົ້າ. ໃນພາລະກິດຂອງພຣະເຈົ້າ, ມະນຸດບໍ່ຄວນຈຳກັດຄວາມພະຍາຍາມຂອງເຂົາ, ຄວນຖວາຍຄວາມຊື່ສັດຂອງເຂົາ ແລະ ບໍ່ຄວນຍຶດຕິດກັບແນວຄິດຫຼາຍ ຫຼື ນັ່ງຢູ່ລ້າໆ ແລະ ລໍຖ້າຄວາມຕາຍ. ພຣະເຈົ້າສາມາດສະຫຼະພຣະອົງເອງເພື່ອມະນຸດ, ແລ້ວເປັນຫຍັງມະນຸດຈຶ່ງບໍ່ສາມາດຖວາຍຄວາມຊື່ສັດຂອງເຂົາໃຫ້ກັບພຣະເຈົ້າໄດ້? ພຣະເຈົ້າມີຫົວໃຈ ແລະ ຈິດໃຈໜຶ່ງດຽວຕໍ່ມະນຸດ, ແລ້ວເປັນຫຍັງມະນຸດຈຶ່ງບໍ່ສາມາດໃຫ້ຄວາມຮ່ວມມືແມ່ນແຕ່ໜ້ອຍດຽວ? ພຣະເຈົ້າປະຕິບັດພາລະກິດເພື່ອມະນຸດຊາດ, ແລ້ວເປັນຫຍັງມະນຸດຈຶ່ງບໍ່ສາມາດປະຕິບັດພາລະກິດບາງຢ່າງຂອງເຂົາເພື່ອການຄຸ້ມຄອງຂອງພຣະເຈົ້າ? ພາລະກິດຂອງພຣະເຈົ້າໄດ້ມາໄກເຖິງຂັ້ນນີ້ແລ້ວ, ແຕ່ເຖິງຢ່າງນັ້ນ ພວກເຈົ້າກໍຍັງໄດ້ແຕ່ເບິ່ງ ແຕ່ບໍ່ປະຕິບັດ, ພວກເຈົ້າໄດ້ແຕ່ຟັງ ແຕ່ບໍ່ເຄື່ອນໄຫວ. ແລ້ວຄົນປະເພດດັ່ງກ່າວບໍ່ແມ່ນເປົ້າໝາຍຂອງການຕົກນະຮົກບໍ? ພຣະເຈົ້າໄດ້ອຸທິດທັງໝົດຂອງພຣະອົງໃຫ້ກັບມະນຸດ, ແລ້ວເປັນຫຍັງໃນປັດຈຸບັນ ມະນຸດຈຶ່ງບໍ່ສາມາດປະຕິບັດໜ້າທີ່ຂອງເຂົາຢ່າງຈິງໃຈ? ສຳລັບພຣະເຈົ້າ, ພາລະກິດຂອງພຣະອົງແມ່ນບຸລິມະສິດທຳອິດຂອງພຣະອົງ ແລະ ພາລະກິດແຫ່ງການຄຸ້ມຄອງຂອງພຣະອົງມີຄວາມສຳຄັນທີ່ສຸດ. ສຳລັບມະນຸດ, ການນຳພຣະທຳຂອງພຣະເຈົ້າເຂົ້າສູ່ການປະຕິບັດ ແລະ ການປະຕິບັດຕາມເງື່ອນໄຂຂອງພຣະເຈົ້າແມ່ນບຸລິມະສິດທຳອິດຂອງເຂົາ. ພວກເຈົ້າທຸກຄົນຄວນເຂົ້າໃຈໃນສິ່ງນີ້. ພຣະທຳທີ່ກ່າວກັບພວກເຈົ້າແມ່ນໄດ້ໄປເຖິງໃຈກາງທາດແທ້ຂອງພວກເຈົ້າ ແລະ ພາລະກິດຂອງພຣະເຈົ້າໄດ້ເຂົ້າສູ່ອານາເຂດທີ່ບໍ່ເຄີຍມີມາກ່ອນ. ຫຼາຍຄົນຍັງບໍ່ເຂົ້າໃຈຄວາມຈິງ ຫຼື ຄວາມບໍ່ຈິງຂອງເສັ້ນທາງນີ້; ພວກເຂົາຍັງລໍຖ້າ ແລະ ເບິ່ງ ແລະ ບໍ່ປະຕິບັດໜ້າທີ່ຂອງພວກເຂົາ. ກົງກັນຂ້າມ, ພວກເຂົາກວດສອບພຣະທຳທຸກຂໍ້ ແລະ ການກະທຳທຸກຢ່າງຂອງພຣະເຈົ້າ, ພວກເຂົາໃສ່ໃຈໃນສິ່ງທີ່ພຣະອົງກິນ ແລະ ນຸ່ງ ແລະ ແນວຄິດຂອງພວກເຂົາກໍຍິ່ງຮ້າຍແຮງຫຼາຍຂຶ້ນ. ຄົນປະເພດດັ່ງກ່າວບໍ່ໄດ້ກຳລັງກັງວົນໃນສິ່ງທີ່ບໍ່ສຳຄັນບໍ? ຄົນປະເພດດັ່ງກ່າວຈະສາມາດເປັນຄົນທີ່ສະແຫວງຫາພຣະເຈົ້າໄດ້ແນວໃດ? ແລ້ວພວກເຂົາຈະສາມາດເປັນຄົນທີ່ມີເຈດຕະນາຍອມຕໍ່ພຣະເຈົ້າໄດ້ແນວໃດ? ພວກເຂົາປະຄວາມຊື່ສັດ ແລະ ໜ້າທີ່ຂອງພວກເຂົາໄວ້ທາງຫຼັງຂອງຄວາມຄິດຂອງພວກເຂົາ ແລະ ໃສ່ໃຈແຕ່ບ່ອນຢູ່ອາໄສຂອງພຣະເຈົ້າແທນ. ພວກເຂົາເປັນຕາໜ່າຍຫຼາຍ! ຖ້າມະນຸດເຂົ້າໃຈທຸກສິ່ງທີ່ເຂົາຄວນເຂົ້າໃຈ ແລະ ນຳທຸກສິ່ງທີ່ເຂົາຄວນປະຕິບັດເຂົ້າສູ່ການປະຕິບັດ, ແລ້ວພຣະເຈົ້າຈະປະທານພອນຂອງພຣະອົງໃຫ້ກັບມະນຸດຢ່າງແນ່ນອນ, ຍ້ອນສິ່ງທີ່ພຣະອົງຮຽກຮ້ອງຈາກມະນຸດກໍຄືໜ້າທີ່ຂອງມະນຸດ ແລະ ສິ່ງທີ່ມະນຸດຄວນປະຕິບັດ. ຖ້າມະນຸດບໍ່ສາມາດເຂົ້າໃຈໃນສິ່ງທີ່ເຂົາຄວນເຂົ້າໃຈ ແລະ ບໍ່ສາມາດນຳສິ່ງທີ່ເຂົາຄວນປະຕິບັດເຂົ້າສູ່ການປະຕິບັດ,

ແລ້ວມະນຸດກໍຈະຖືກລົງໂທດ. ຄົນທີ່ບໍ່ຮ່ວມມືກັບພຣະເຈົ້າແມ່ນສັດຕູກັບພຣະເຈົ້າ, ຄົນທີ່ບໍ່ຍອມຮັບພາລະກິດໃໝ່ແມ່ນຕໍ່ຕ້ານພາລະກິດນັ້ນ, ເຖິງແມ່ນວ່າ ຄົນດັ່ງກ່າວບໍ່ໄດ້ເຮັດຫຍັງທີ່ຕໍ່ຕ້ານພາລະກິດນັ້ນຢ່າງຊັດເຈນກໍຕາມ. ທຸກຄົນທີ່ບໍ່ນຳຄວາມຈິງທີ່ພຣະເຈົ້າຮຽກຮ້ອງເຂົ້າສູ່ການປະຕິບັດກໍເປັນຄົນທີ່ຕໍ່ຕ້ານໂດຍຕັ້ງໃຈ ແລະ ບໍ່ເຊື່ອຟັງພຣະທຳຂອງພຣະເຈົ້າ, ເຖິງແມ່ນຄົນດັ່ງກ່າວຈະໃສ່ໃຈກັບພາລະກິດຂອງພຣະວິນຍານບໍລິສຸດເປັນພິເສດກໍຕາມ. ຄົນທີ່ບໍ່ເຊື່ອຟັງພຣະທຳຂອງພຣະເຈົ້າ ແລະ ຍອມຕໍ່ພຣະເຈົ້າແມ່ນຄົນກະບົດ ແລະ ພວກເຂົາຕໍ່ຕ້ານພຣະເຈົ້າ. ຄົນທີ່ບໍ່ປະຕິບັດໜ້າທີ່ຂອງພວກເຂົາແມ່ນຄົນທີ່ບໍ່ຮ່ວມມືກັບພຣະເຈົ້າ ແລະ ຄົນທີ່ບໍ່ຮ່ວມມືກັບພຣະເຈົ້າແມ່ນຄົນທີ່ບໍ່ຍອມຮັບພາລະກິດຂອງພຣະວິນຍານບໍລິສຸດ.

ເມື່ອພາລະກິດຂອງພຣະເຈົ້າໄປເຖິງຈຸດໃດໜຶ່ງ ແລະ ການຄຸ້ມຄອງຂອງພຣະອົງໄດ້ໄປເຖິງຈຸດໃດໜຶ່ງ, ຄົນທີ່ພໍໃຈພຣະອົງ ກໍລ້ວນແລ້ວແຕ່ເປັນຄົນທີ່ສາມາດປະຕິບັດຕາມເງື່ອນໄຂຂອງພຣະອົງ. ພຣະເຈົ້າຮຽກຮ້ອງມະນຸດຕາມມາດຕະຖານຂອງພຣະອົງເອງ ແລະ ຕາມສິ່ງທີ່ມະນຸດສາມາດບັນລຸໄດ້. ໃນຂະນະທີ່ເວົ້າເຖິງການຄຸ້ມຄອງຂອງພຣະອົງ, ພຣະອົງໄດ້ຊີ້ທິດທາງໃຫ້ກັບມະນຸດ ແລະ ຈັດກຽມເສັ້ນທາງແຫ່ງຄວາມຢູ່ລອດໃຫ້ກັບມະນຸດ. ທັງການຄຸ້ມຄອງຂອງພຣະເຈົ້າ ແລະ ການປະຕິບັດຂອງມະນຸດແມ່ນຂັ້ນຕອນດຽວກັນຂອງພາລະກິດ ແລະ ຖືກປະຕິບັດໃນເວລາດຽວກັນ. ການເວົ້າເຖິງການຄຸ້ມຄອງຂອງພຣະເຈົ້າແມ່ນກ່ຽວພັນກັບການປ່ຽນແປງໃນອຸປະນິໄສຂອງມະນຸດ ແລະ ການເວົ້າເຖິງສິ່ງທີ່ມະນຸດຄວນປະຕິບັດ ແລະ ການປ່ຽນແປງໃນອຸປະນິໄສຂອງມະນຸດ ກໍກ່ຽວພັນກັບພາລະກິດຂອງພຣະເຈົ້າ; ບໍ່ມີຈັກເທື່ອທີ່ທັງສອງຢ່າງຈະຖືກແຍກອອກຈາກກັນ. ການປະຕິບັດຂອງມະນຸດປ່ຽນແປງເທື່ອລະບາດກ້າວ. ນັ້ນກໍຍ້ອນເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຈາກມະນຸດນັ້ນໄດ້ປ່ຽນແປງເຊັ່ນກັນ ແລະ ຍ້ອນພາລະກິດຂອງພຣະເຈົ້າປ່ຽນແປງ ແລະ ກ້າວໜ້າຢູ່ສະເໝີ. ຖ້າການປະຕິບັດຂອງມະນຸດຍັງຖືກກັບດັກຢູ່ໃນຄຳສັ່ງສອນ, ສິ່ງນີ້ກໍພິສູດວ່າ ເຂົາປາສະຈາກພາລະກິດ ແລະ ການນຳພາຂອງພຣະເຈົ້ານັ້ນ; ຖ້າການປະຕິບັດຂອງມະນຸດບໍ່ປ່ຽນແປງຈັກເທື່ອ ຫຼື ບໍ່ເລິກເຊິ່ງຂຶ້ນ, ແລ້ວສິ່ງນີ້ກໍພິສູດວ່າການປະຕິບັດຂອງມະນຸດຖືກປະຕິບັດຕາມຄວາມປະສົງຂອງມະນຸດ ແລະ ບໍ່ແມ່ນການປະຕິບັດແຫ່ງຄວາມຈິງ; ຖ້າມະນຸດບໍ່ມີເສັ້ນທາງໃຫ້ຍ່າງ, ແລ້ວເຂົາກໍຖືກຕົກລົງສູ່ກຳມືຂອງຊາຕານໄປແລ້ວ ແລະ ຖືກຄວບຄຸມໂດຍຊາຕານ ເຊິ່ງໝາຍຄວາມວ່າ ເຂົາຖືກຄວບຄຸມໂດຍວິນຍານຊົ່ວຮ້າຍ. ຖ້າການປະຕິບັດຂອງມະນຸດບໍ່ໄດ້ເລິກເຊິ່ງກວ່າເກົ່າ, ແລ້ວພາລະກິດຂອງພຣະເຈົ້າກໍຈະບໍ່ພັດທະນາ ແລະ ຖ້າບໍ່ມີການປ່ຽນແປງໃນພາລະກິດຂອງພຣະເຈົ້າ, ແລ້ວການເຂົ້າສູ່ຂອງມະນຸດກໍຈະຢຸດສະງັດ; ນີ້ເປັນສິ່ງທີ່ຫຼີກເວັ້ນບໍ່ໄດ້. ທົ່ວພາລະກິດທັງໝົດຂອງພຣະເຈົ້າ, ຖ້າມະນຸດຕ້ອງປະຕິບັດຕາມພຣະບັນຍັດຂອງພຣະເຢໂຮວາ, ແລ້ວພາລະກິດຂອງພຣະເຈົ້າກໍບໍ່ສາມາດຄືບໜ້າໄດ້, ແລ້ວຍິ່ງເປັນໄປບໍ່ໄດ້ທີ່ຈະນຳຍຸກທັງໝົດໄປສູ່ຈຸດສິ້ນສຸດ. ຖ້າມະນຸດຍຶດຕິດກັບໄມ້ກາງແຂນຢູ່ສະເໝີ ແລະ ມີແຕ່ຄວາມອົດທົນ ແລະ ຄວາມຖ່ອມຕົນ, ແລ້ວມັນກໍເປັນໄປບໍ່ໄດ້ທີ່ຈະໃຫ້ພາລະກິດຂອງພຣະເຈົ້າສືບຕໍ່ໄປຂ້າງໜ້າ. ການຄຸ້ມຄອງຫົກພັນປີຈະບໍ່ສາມາດສິ້ນສຸດລົງພຽງໃນທ່າມກາງຄົນທີ່ປະຕິບັດຕາມພຣະບັນຍັດ ຫຼື ຍຶດຕິດ

ກັບໄມ້ກາງແຂນ ແລະ ຄົນທີ່ມີແຕ່ຄວາມອົດທົນ ແລະ ຄວາມຖ່ອມຕົນເທົ່ານັ້ນ. ກົງກັນຂ້າມ, ພາລະກິດແຫ່ງການຄຸ້ມຄອງທັງໝົດຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດທ່າມກາງຄົນທີ່ຢູ່ໃນຍຸກສຸດທ້າຍ, ຄົນທີ່ຮູ້ຈັກພຣະເຈົ້າ ແລະ ຄົນທີ່ໄດ້ຟື້ນຟູຈາກການຈັບກຸມຂອງຊາຕານ ແລະ ປົດຕົນເອງອອກຈາກອິດທິພົນຂອງຊາຕານຢ່າງສົມບູນ. ນີ້ແມ່ນທິດທາງທີ່ບໍ່ສາມາດຫຼີກເວັ້ນໄດ້ໃນພາລະກິດຂອງພຣະເຈົ້າ. ເປັນຫຍັງຈຶ່ງເວົ້າວ່າ ການປະຕິບັດຂອງຄົນທີ່ຢູ່ໃນຄຣິສຕະຈັກແຫ່ງສາສະໜາແມ່ນຫຼ້າສະໄໝ? ນັ້ນກໍເພາະວ່າ ສິ່ງທີ່ພວກເຂົານຳເຂົ້າສູ່ການປະຕິບັດແມ່ນຫ່າງເຫີນຈາກພາລະກິດແຫ່ງປັດຈຸບັນ. ໃນຍຸກແຫ່ງພຣະຄຸນ, ສິ່ງທີ່ພວກເຂົານຳເຂົ້າສູ່ການປະຕິບັດຄືສິ່ງທີ່ຖືກຕ້ອງ, ແຕ່ເມື່ອຍຸກໄດ້ຜ່ານພົ້ນໄປ ແລະ ພາລະກິດຂອງພຣະເຈົ້າໄດ້ປ່ຽນໄປ, ການປະຕິບັດຂອງພວກເຂົາກໍຫຼ້າສະໄໝຂຶ້ນເລື້ອຍໆ. ມັນຖືກທົດແທນດ້ວຍພາລະກິດໃໝ່ ແລະ ແສງສະຫວ່າງໃໝ່. ອີງຕາມພື້ນຖານເດີມ, ພາລະກິດຂອງພຣະວິນຍານບໍລິສຸດໄດ້ຄືບໜ້າລົງເລິກຕື່ມອີກສອງສາມບາດກ້າວ. ແຕ່ຄົນເຫຼົ່ານັ້ນຍັງຕິດຢູ່ໃນຂັ້ນຕອນທຳອິດຂອງພາລະກິດຂອງພຣະເຈົ້າ ແລະ ຍັງຕິດແໜ້ນຢູ່ກັບການປະຕິບັດທີ່ເກົ່າແກ່ນັ້ນ ແລະ ແສງສະຫວ່າງເດີມໆ. ພາລະກິດຂອງພຣະເຈົ້າສາມາດປ່ຽນແປງຢ່າງໃຫຍ່ຫຼວງໃນສາມ ຫຼື ຫ້າປີ, ແລ້ວຈະບໍ່ມີການປ່ຽນແປງທີ່ຍິ່ງໃຫຍ່ກວ່າເກີດຂຶ້ນໃນຊ່ວງເວລາ 2.000 ປີບໍ? ຖ້າມະນຸດບໍ່ມີແສງສະຫວ່າງ ຫຼື ການປະຕິບັດໃໝ່, ມັນກໍໝາຍຄວາມວ່າ ເຂົານຳບໍ່ທັນພາລະກິດຂອງພຣະວິນຍານບໍລິສຸດ. ນີ້ແມ່ນຄວາມລົ້ມເຫຼວຂອງມະນຸດ; ການມີຢູ່ຂອງພາລະກິດໃໝ່ຂອງພຣະເຈົ້າບໍ່ສາມາດຖືກປະຕິເສດໄດ້ ເພາະໃນປັດຈຸບັນ ຜູ້ຄົນເຫຼົ່ານັ້ນທີ່ໄດ້ຮັບພາລະກິດຜ່ານມາຂອງພຣະວິນຍານບໍລິສຸດຍັງປະຕິບັດຢ່າງຫຼ້າສະໄໝຢູ່. ພາລະກິດຂອງພຣະວິນຍານບໍລິສຸດກ້າວໄປຂ້າງໜ້າຢູ່ສະເໝີ ແລະ ທຸກຄົນທີ່ຢູ່ໃນກະແສຂອງພຣະວິນຍານບໍລິສຸດກໍຄວນກ້າວໜ້າໃຫ້ເລິກເຊິ່ງຂຶ້ນ ແລະ ຄວນປ່ຽນແປງເທື່ອລະບາດກ້າວ. ພວກເຂົາບໍ່ຄວນຢຸດຢູ່ຂັ້ນຕອນໃດໜຶ່ງ. ມີພຽງແຕ່ຄົນທີ່ບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດເທົ່ານັ້ນທີ່ຈະຍັງຄົງຢູ່ທ່າມກາງພາລະກິດທຳອິດຂອງພຣະອົງ ແລະ ບໍ່ຍອມຮັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ. ເຊິ່ງມີພຽງແຕ່ຄົນທີ່ບໍ່ເຊື່ອຟັງເທົ່ານັ້ນທີ່ຈະບໍ່ສາມາດຮັບພາລະກິດຂອງພຣະວິນຍານບໍລິສຸດ. ຖ້າການປະຕິບັດຂອງມະນຸດບໍ່ທັນກັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ, ແລ້ວການປະຕິບັດຂອງມະນຸດກໍຫ່າງເຫີນຈາກພາລະກິດແຫ່ງປັດຈຸບັນຢ່າງແນ່ນອນ ແລະ ບໍ່ສາມາດເຂົ້າກັບພາລະກິດແຫ່ງປັດຈຸບັນໄດ້ຢ່າງແນ່ນອນ. ຄົນປະເພດດັ່ງກ່າວທີ່ຫຼ້າຫຼັງແມ່ນບໍ່ສາມາດເຮັດໃຫ້ຄວາມປະສົງຂອງພຣະເຈົ້າສຳເລັດໄດ້, ແຮງໄກທີ່ພວກເຂົາຈະສາມາດກາຍເປັນຄົນທີ່ຢືນເປັນພະຍານໃຫ້ກັບພຣະເຈົ້າໃນທີ່ສຸດ. ຍິ່ງໄປກວ່ານັ້ນ, ແຜນການຄຸ້ມຄອງທັງໝົດບໍ່ສາມາດຖືກເຮັດໃຫ້ສຳເລັດໄດ້ທ່າມກາງກຸ່ມຄົນດັ່ງກ່າວ. ສຳລັບຄົນທີ່ເຄີຍເຫັນພຣະບັນຍັດຂອງພຣະເຢໂຮວາ ແລະ ຄົນທີ່ເຄີຍທົນທຸກເພື່ອໄມ້ກາງແຂນ, ຖ້າພວກເຂົາບໍ່ສາມາດຍອມຮັບຂັ້ນຕອນຂອງພາລະກິດແຫ່ງຍຸກສຸດທ້າຍ, ແລ້ວທຸກສິ່ງທີ່ພວກເຂົາເຮັດກໍຈະສູນເປົ່າ ແລະ ບໍ່ມີປະໂຫຍດ. ການສະແດງອອກທີ່ຊັດເຈນທີ່ສຸດຂອງພາລະກິດຂອງພຣະວິນຍານບໍລິສຸດແມ່ນຢູ່ໃນຕອນນີ້ ແລະ ໃນປັດຈຸບັນນີ້, ບໍ່ແມ່ນເກາະຕິດກັບອະດີດ. ຄົນທີ່ບໍ່ທັນພາລະກິດໃນປັດຈຸບັນ ແລະ ຄົນທີ່ຖືກແຍກ

ອອກຈາກການປະຕິບັດໃນປັດຈຸບັນ ແມ່ນຄົນທີ່ຕໍ່ຕ້ານ ແລະ ບໍ່ຍອມຮັບພາລະກິດຂອງພຣະວິນຍານບໍລິສຸດ. ຄົນດັ່ງກ່າວທ້າທາຍພາລະກິດໃນປັດຈຸບັນຂອງພຣະເຈົ້າ. ເຖິງແມ່ນພວກເຂົາຍຶດຕິດກັບແສງສະຫວ່າງໃນອະດີດ, ມັນກໍບໍ່ສາມາດປະຕິເສດໄດ້ວ່າ ພວກເຂົາບໍ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ. ເປັນຫຍັງຈຶ່ງມີການເວົ້າເຖິງການປ່ຽນແປງໃນການປະຕິບັດຂອງມະນຸດ, ເຖິງຄວາມແຕກຕ່າງໃນການປະຕິບັດລະຫວ່າງອະດີດ ແລະ ປັດຈຸບັນ, ເຖິງວິທີການປະຕິບັດໃນລະຫວ່າງຍຸກທີ່ຜ່ານມາ ແລະ ເຖິງວິທີການປະຕິບັດໃນປັດຈຸບັນ? ຄວາມແຕກຕ່າງດັ່ງກ່າວໃນການປະຕິບັດຂອງມະນຸດຖືກກ່າວເຖິງຕະຫຼອດກໍ່ຍ້ອນພາລະກິດຂອງພຣະວິນຍານບໍລິສຸດກ້າວໄປຂ້າງໜ້າຢ່າງຕໍ່ເນື່ອງ ແລະ ສະນັ້ນການປະຕິບັດຂອງມະນຸດຈຶ່ງຈຳເປັນຕ້ອງປ່ຽນແປງຢ່າງຕໍ່ເນື່ອງ. ຖ້າມະນຸດຍັງຕິດຄ້າງຢູ່ໃນຂັ້ນຕອນໃດໜຶ່ງ, ແລ້ວນີ້ກໍພິສູດວ່າ ເຂົາບໍ່ສາມາດນຳທັນພາລະກິດໃໝ່ ແລະ ແສງສະຫວ່າງໃໝ່ຂອງພຣະເຈົ້າໄດ້; ມັນບໍ່ໄດ້ພິສູດວ່າ ແຜນການຄຸ້ມຄອງຂອງພຣະເຈົ້າບໍ່ໄດ້ປ່ຽນແປງ. ຄົນທີ່ຢູ່ນອກກະແສຂອງພຣະວິນຍານບໍລິສຸດຄິດວ່າພວກເຂົາຖືກຕ້ອງຢູ່ສະເໝີ ແຕ່ຄວາມຈິງແລ້ວ ພາລະກິດຂອງພຣະເຈົ້າທີ່ຢູ່ໃນພວກເຂົາສິ້ນສຸດລົງແຕ່ດົນນານແລ້ວ ແລະ ພາລະກິດຂອງພຣະວິນຍານບໍລິສຸດແມ່ນຫາຍໄປຈາກພວກເຂົາແລ້ວ. ພາລະກິດຂອງພຣະເຈົ້າແມ່ນໄດ້ຍ້າຍໄປສູ່ຄົນກຸ່ມອື່ນຕັ້ງແຕ່ດົນແລ້ວ ເຊິ່ງເປັນກຸ່ມທີ່ພຣະອົງເຈດຕະນາຈະເຮັດໃຫ້ພາລະກິດໃໝ່ຂອງພຣະອົງສຳເລັດ. ເພາະຄົນທີ່ຢູ່ໃນສາສະໜາກໍບໍ່ສາມາດຍອມຮັບເອົາພາລະກິດໃໝ່ຂອງພຣະເຈົ້າໄດ້ ແລະ ພຽງແຕ່ຍຶດຕິດກັບພາລະກິດເດີມໃນອະດີດ, ສະນັ້ນ ພຣະເຈົ້າຈຶ່ງປະຖິ້ມຄົນເຫຼົ່ານີ້ ແລະ ປະຕິບັດພາລະກິດໃໝ່ຂອງພຣະອົງກັບຄົນທີ່ຍອມຮັບພາລະກິດໃໝ່ນີ້. ນີ້ແມ່ນຄົນທີ່ຮ່ວມມືໃນພາລະກິດໃໝ່ຂອງພຣະອົງ ແລະ ພຽງແຕ່ໃນວິທີນີ້ເທົ່ານັ້ນ ການຄຸ້ມຄອງຂອງພຣະອົງຈຶ່ງຈະສາມາດເຮັດໃຫ້ສຳເລັດໄດ້. ການຄຸ້ມຄອງຂອງພຣະເຈົ້າກ້າວໄປຂ້າງໜ້າຢູ່ສະເໝີ ແລະ ການປະຕິບັດຂອງມະນຸດກໍສູງຂຶ້ນເລື້ອຍໆ. ພຣະເຈົ້າປະຕິບັດພາລະກິດຢູ່ສະເໝີ ແລະ ມະນຸດກໍຕ້ອງການຢູ່ສະເໝີ, ເມື່ອທັງສອງໄປເຖິງຈຸດສຸດຍອດຂອງພວກເຂົາ, ພຣະເຈົ້າ ແລະ ມະນຸດຈະບັນລຸການຢູ່ຮ່ວມກັນຢ່າງສົມບູນ. ນີ້ແມ່ນການສະແດງອອກເຖິງຄວາມສຳເລັດຂອງພາລະກິດຂອງພຣະເຈົ້າ ແລະ ເປັນຜົນຮັບສຸດທ້າຍຂອງການຄຸ້ມຄອງທັງໝົດຂອງພຣະເຈົ້າ.

ໃນແຕ່ລະຂັ້ນຕອນຂອງພາລະກິດຂອງພຣະເຈົ້າ ຍັງມີເງື່ອນໄຂທີ່ສອດຄ່ອງກັນຂອງມະນຸດ. ທຸກຄົນທີ່ຢູ່ພາຍໃນກະແສຂອງພຣະວິນຍານບໍລິສຸດແມ່ນມີການສະຖິດ ແລະ ວິໄນຂອງພຣະວິນຍານບໍລິສຸດ ແລະ ຄົນທີ່ບໍ່ໄດ້ຢູ່ພາຍໃນກະແສຂອງພຣະວິນຍານບໍລິສຸດແມ່ນຢູ່ພາຍໃຕ້ການບັນຊາຂອງຊາຕານ ແລະ ປາສະຈາກພາລະກິດໃດໆຂອງພຣະວິນຍານບໍລິສຸດ. ຄົນທີ່ຢູ່ໃນກະແສຂອງພຣະວິນຍານບໍລິສຸດແມ່ນຄົນທີ່ຍອມຮັບພາລະກິດໃໝ່ຂອງພຣະເຈົ້າ ແລະ ເປັນຄົນທີ່ຮ່ວມມືໃນພາລະກິດໃໝ່ຂອງພຣະເຈົ້າ. ຖ້າຄົນທີ່ຢູ່ພາຍໃນກະແສນີ້ບໍ່ສາມາດຮ່ວມມື ແລະ ບໍ່ສາມາດນຳຄວາມຈິງທີ່ພຣະເຈົ້າຮຽກຮ້ອງນັ້ນເຂົ້າສູ່ການປະຕິບັດໃນເວລານີ້ໄດ້, ແລ້ວພວກເຂົາກໍຈະຖືກລົງວິໄນ ແລະ ຮ້າຍແຮງໄປກວ່ານັ້ນແມ່ນຈະຖືກພຣະວິນຍານບໍລິສຸດປະຖິ້ມ. ຄົນທີ່ຍອມຮັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ ຈະດຳລົງຊີວິດຢູ່ພາຍໃນກະແສຂອງພຣະວິນຍານບໍລິສຸດ, ຈະຮັບເອົາຄວາມດູແລ ແລະ

ການປົກປ້ອງຂອງພຣະວິນຍານບໍລິສຸດ. ຄົນທີ່ເຕັມໃຈນໍາຄວາມຈິງເຂົ້າສູ່ການປະຕິບັດແມ່ນຖືກສ່ອງແສງສະຫວ່າງໂດຍພຣະວິນຍານບໍລິສຸດ ແລະ ຄົນທີ່ບໍ່ເຕັມໃຈນໍາຄວາມຈິງເຂົ້າສູ່ການປະຕິບັດແມ່ນຖືກລົງວິໄນໂດຍພຣະວິນຍານບໍລິສຸດ ແລະ ອາດເຖິງຂັ້ນຖືກລົງໂທດໄດ້. ບໍ່ວ່າພວກເຂົາຈະເປັນຄົນປະເພດໃດກໍຕາມ, ຖ້າພວກເຂົາຢູ່ພາຍໃນກະແສຂອງພຣະວິນຍານບໍລິສຸດ, ພຣະເຈົ້າກໍຈະຮັບຜິດຊອບທຸກຄົນທີ່ຍອມຮັບພາລະກິດໃໝ່ຂອງພຣະອົງເພື່ອເຫັນແກ່ນາມຂອງພຣະອົງ. ຜູ້ຄົນທີ່ສັນລະເສີນນາມຂອງພຣະອົງ ແລະ ເຕັມໃຈນໍາພຣະທໍາຂອງພຣະອົງເຂົ້າສູ່ການປະຕິບັດຈະໄດ້ຮັບພອນຂອງພຣະອົງ; ຄົນທີ່ບໍ່ເຊື່ອຟັງພຣະອົງ ແລະ ບໍ່ນໍາພຣະທໍາຂອງພຣະອົງເຂົ້າສູ່ການປະຕິບັດຈະໄດ້ຮັບການລົງໂທດຂອງພຣະອົງ. ຄົນທີ່ຢູ່ໃນກະແສຂອງພຣະວິນຍານບໍລິສຸດແມ່ນຄົນທີ່ຍອມຮັບພາລະກິດໃໝ່ ແລະ ຍ້ອນພວກເຂົາຍອມຮັບພາລະກິດໃໝ່, ພວກເຂົາຄວນມີການຮ່ວມມືທີ່ເໝາະສົມກັບພຣະເຈົ້າ ແລະ ບໍ່ຄວນປະພຶດຄືກັບພວກກະບົດທີ່ບໍ່ປະຕິບັດໜ້າທີ່ຂອງພວກເຂົາ. ນີ້ແມ່ນພຽງເງື່ອນໄຂດຽວເທົ່ານັ້ນທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ. ສໍາລັບຄົນທີ່ບໍ່ຍອມຮັບພາລະກິດໃໝ່ແມ່ນຈະບໍ່ເປັນແບບນັ້ນ: ພວກເຂົາຢູ່ນອກກະແສຂອງພຣະວິນຍານບໍລິສຸດ ແລະ ການລົງວິໄນ ແລະ ການຕິເຕືອນຂອງພຣະວິນຍານບໍລິສຸດແມ່ນໃຊ້ບໍ່ໄດ້ກັບພວກເຂົາ. ໝົດມື້, ຄົນເຫຼົ່ານີ້ດໍາລົງຊີວິດຢູ່ພາຍໃນເນື້ອໜັງ, ພວກເຂົາດໍາລົງຊີວິດຢູ່ພາຍໃນຄວາມຄິດຂອງພວກເຂົາ ແລະ ທຸກສິ່ງທີ່ພວກເຂົາເຮັດກໍແມ່ນຕາມຄໍາສັ່ງສອນທີ່ເກີດຈາກການວິເຄາະ ແລະ ການຄົ້ນຄວ້າດ້ວຍສະໝອງຂອງພວກເຂົາເອງ. ມັນບໍ່ແມ່ນເງື່ອນໄຂຂອງພາລະກິດໃໝ່ຂອງພຣະວິນຍານບໍລິສຸດ ແຮງໄກທີ່ມັນຈະເປັນການຮ່ວມມືກັບພຣະເຈົ້າ. ຄົນທີ່ບໍ່ຍອມຮັບພາລະກິດໃໝ່ຂອງພຣະເຈົ້າແມ່ນປາສະຈາກການສະຖິດຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນກໍຄືປາສະຈາກພອນ ແລະ ການປົກປ້ອງຂອງພຣະເຈົ້າ. ຄໍາເວົ້າ ແລະ ການກະທໍາສ່ວນໃຫຍ່ຂອງພວກເຂົາແມ່ນຍຶດຕິດຢູ່ກັບເງື່ອນໄຂຂອງພາລະກິດໃນອະດີດຂອງພຣະວິນຍານບໍລິສຸດ; ພວກມັນເປັນຄໍາສັ່ງສອນບໍ່ແມ່ນຄວາມຈິງ. ຄໍາສັ່ງສອນ ແລະ ກົດລະບຽບດັ່ງກ່າວແມ່ນພຽງພໍທີ່ຈະພິສູດວ່າ ການຊຸມນຸມຂອງຜູ້ຄົນເຫຼົ່ານີ້ແມ່ນບໍ່ມີຫຍັງນອກຈາກດ້ານສາສະໜາ; ພວກເຂົາບໍ່ແມ່ນຄົນທີ່ຖືກເລືອກ ຫຼື ເປັນເປົ້າໝາຍຂອງພາລະກິດຂອງພຣະເຈົ້າ. ການຊຸມນຸມຂອງທຸກຄົນໃນທ່າມກາງພວກເຂົາ ສາມາດເອີ້ນໄດ້ວ່າ ສະພາໃຫຍ່ແຫ່ງສາສະໜາເທົ່ານັ້ນ ແລະ ບໍ່ສາມາດເອີ້ນວ່າຄຣິສຕະຈັກໄດ້. ນີ້ຄືຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້. ພວກເຂົາບໍ່ມີພາລະກິດໃໝ່ຂອງພຣະວິນຍານບໍລິສຸດ; ສິ່ງທີ່ພວກເຂົາເຮັດເບິ່ງຄືກັບວ່າເປັນການລະນຶກເຖິງສາສະໜາ, ສິ່ງທີ່ພວກເຂົາດໍາລົງຊີວິດຕາມເບິ່ງຄືກັບວ່າເຕັມໄປດ້ວຍສາສະໜາ; ພວກເຂົາບໍ່ມີການສະຖິດ ແລະ ພາລະກິດຂອງພຣະວິນຍານບໍລິສຸດ ແຮງໄກທີ່ພວກເຂົາຈະມີສິດຮັບເອົາການລົງວິໄນ ຫຼື ແສງສະຫວ່າງຂອງພຣະວິນຍານບໍລິສຸດ. ຄົນເຫຼົ່ານີ້ລ້ວນແລ້ວແຕ່ເປັນຊາກສົບທີ່ບໍ່ມີຊີວິດ ແລະ ໜອນທີ່ປາສະຈາກຈິດວິນຍານ. ພວກເຂົາບໍ່ມີຄວາມຮູ້ກ່ຽວກັບການກະບົດ ແລະ ການຕໍ່ຕ້ານຂອງມະນຸດ, ບໍ່ມີຄວາມຮູ້ກ່ຽວກັບການເຮັດຊົ່ວທຸກຢ່າງຂອງມະນຸດ ແຮງໄກທີ່ພວກເຂົາຈະຮູ້ຈັກເຖິງພາລະກິດຂອງພຣະເຈົ້າ ແລະ ຄວາມປະສົງໃນປັດຈຸບັນຂອງພຣະເຈົ້າ. ພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ບໍ່ມີຄວາມຮູ້ ແລະ ຄົນຊັ້ນຕໍ່າ, ພວກເຂົາຄືຄົນຕໍ່າຊ້າທີ່ບໍ່ສົມຄວນໄດ້ຖືກເອີ້ນ

ວ່າຜູ້ເຊື່ອ! ບໍ່ມີຫຍັງທີ່ພວກເຂົາເຮັດມີຄວາມກ່ຽວພັນໃດໆກັບການຄຸ້ມຄອງຂອງພຣະເຈົ້າ ແຮງໄກທີ່ມັນຈະສາມາດທຳລາຍແຜນການຂອງພຣະເຈົ້າໄດ້. ຄຳເວົ້າ ແລະ ການກະທຳຂອງພວກເຂົາເປັນຕາລັງກຽດເກີນໄປ, ເປັນຕາເວດທະນາເກີນໄປ ແລະ ບໍ່ສົມຄວນເອີຍເຖິງເລີຍ. ບໍ່ມີຫຍັງທີ່ປະຕິບັດໂດຍຄົນທີ່ບໍ່ໄດ້ຢູ່ໃນກະແສຂອງພຣະວິນຍານບໍລິສຸດ ມີສ່ວນກ່ຽວຂ້ອງກັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ. ດ້ວຍເຫດນີ້, ບໍ່ວ່າພວກເຂົາຈະເຮັດຫຍັງກໍຕາມ, ພວກເຂົາກໍປາສະຈາກການລົງວິໄນຂອງພຣະວິນຍານບໍລິສຸດ ແລະ ຍິ່ງໄປກວ່ານັ້ນ ແມ່ນປາສະຈາກແສງສະຫວ່າງຂອງພຣະວິນຍານບໍລິສຸດ. ຍ້ອນພວກເຂົາລ້ວນແລ້ວແຕ່ເປັນຄົນທີ່ບໍ່ຮັກຄວາມຈິງ ແລະ ເປັນທີ່ກຽດຊັງ ແລະ ຖືກປະຕິເສດໂດຍພຣະວິນຍານບໍລິສຸດ. ພວກເຂົາຖືກເອີ້ນວ່າເປັນຄົນຊົ່ວຊ້າ ເພາະພວກເຂົາຍ່າງໃນເນື້ອໜັງ ແລະ ເຮັດຫຍັງກໍຕາມທີ່ພວກເຂົາພໍໃຈ ໂດຍພາຍໃຕ້ປ້າຍໂຄສະນາຂອງພຣະເຈົ້າ. ໃນຂະນະທີ່ພຣະເຈົ້າປະຕິບັດພາລະກິດ, ພວກເຂົາກໍຕັ້ງໃຈຕໍ່ຕ້ານພຣະອົງ ແລະ ແລ່ນໃນທາງກົງກັນຂ້າມກັບພຣະອົງ. ຄວາມລົ້ມເຫຼວຂອງມະນຸດໃນການຮ່ວມມືກັບພຣະເຈົ້າຄືການກະບົດໃນຕົວມັນເອງຢ່າງແຮງ, ສະນັ້ນ ຄົນເຫຼົ່ານັ້ນທີ່ຕັ້ງໃຈຕໍ່ຕ້ານພຣະເຈົ້າຈະບໍ່ໄດ້ຮັບຜົນກຳສະໜອງທີ່ພວກເຂົາສົມຄວນໄດ້ຮັບບໍ? ເມື່ອເວົ້າເຖິງການເຮັດຊົ່ວຂອງຄົນເຫຼົ່ານີ້, ບາງຄົນແມ່ນຢາກສາບແຊ່ງພວກເຂົາ, ໃນຂະນະທີ່ພຣະເຈົ້າບໍ່ສົນໃຈພວກເຂົາເລີຍ. ສຳລັບມະນຸດແລ້ວ, ມັນເບິ່ງຄືກັບວ່າ ການກະທຳຂອງພວກເຂົາກ່ຽວຂ້ອງກັບນາມຂອງພຣະເຈົ້າ, ແຕ່ໃນຄວາມຈິງແລ້ວ ສຳລັບພຣະເຈົ້າ, ມັນບໍ່ກ່ຽວຂ້ອງຫຍັງກັບນາມຂອງພຣະອົງ ຫຼື ເປັນພະຍານໃຫ້ກັບພຣະອົງເລີຍ. ບໍ່ວ່າຄົນເຫຼົ່ານີ້ຈະເຮັດຫຍັງກໍຕາມ, ມັນກໍບໍ່ກ່ຽວພັນກັບພຣະເຈົ້າ: ມັນບໍ່ກ່ຽວພັນກັບນາມຂອງພຣະອົງ ແລະ ພາລະກິດໃນປັດຈຸບັນຂອງພຣະອົງ. ຄົນເຫຼົ່ານີ້ເຮັດໃຫ້ຕົນເອງອັບອາຍ ແລະ ສະແດງເຖິງຊາຕານ; ພວກເຂົາເປັນຄົນຊົ່ວທີ່ສະສົມມື້ແຫ່ງຄວາມໂກດຮ້າຍ. ໃນປັດຈຸບັນ, ບໍ່ວ່າການກະທຳຂອງພວກເຂົາຈະແມ່ນຫຍັງກໍຕາມ ແລະ ຖ້າພວກເຂົາບໍ່ຂັດຂວາງການຄຸ້ມຄອງຂອງພຣະເຈົ້າ ແລະ ບໍ່ມີຫຍັງກ່ຽວຂ້ອງກັບພາລະກິດໃໝ່ຂອງພຣະເຈົ້າ, ຄົນດັ່ງກ່າວກໍຈະບໍ່ຕົກຢູ່ໃນຜົນກຳສະໜອງທີ່ກ່ຽວຂ້ອງ ຍ້ອນມື້ແຫ່ງຄວາມໂກດຮ້າຍຍັງບໍ່ທັນມາຮອດເທື່ອ. ມີຫຼາຍສິ່ງທີ່ເຮັດໃຫ້ຜູ້ຄົນເຊື່ອວ່າພຣະເຈົ້າຄວນຈັດການໄດ້ແລ້ວ ແລະ ພວກເຂົາຄິດວ່າ ຄົນຊົ່ວເຫຼົ່ານັ້ນຄວນໄດ້ຮັບຜົນກຳສະໜອງຢ່າງໄວເທົ່າທີ່ຈະໄວໄດ້. ແຕ່ຍ້ອນພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າຍັງບໍ່ໄດ້ມາເຖິງຈຸດສິ້ນສຸດເທື່ອ ແລະ ມື້ແຫ່ງຄວາມໂກດຮ້າຍຍັງບໍ່ໄດ້ມາຮອດ, ຄົນບໍ່ຊອບທຳກໍຍັງສືບຕໍ່ປະຕິບັດການກະທຳທີ່ບໍ່ຊອບທຳຂອງພວກເຂົາ. ບາງຄົນເວົ້າວ່າ “ຄົນທີ່ຢູ່ໃນສາສະໜາແມ່ນປາສະຈາກການສະຖິດ ຫຼື ພາລະກິດຂອງພຣະວິນຍານບໍລິສຸດ ແລະ ພວກເຂົານຳຄວາມອັບອາຍມາສູ່ນາມຂອງພຣະເຈົ້າ; ແລ້ວເປັນຫຍັງພຣະເຈົ້າຈຶ່ງບໍ່ທຳລາຍພວກເຂົາ ແທນທີ່ຈະຍັງອົດກັ້ນຕໍ່ຄວາມປະພຶດຢ່າງດື້ດ້ານຂອງພວກເຂົາ?” ຄົນເຫຼົ່ານີ້ ຜູ້ທີ່ເປັນການສະແດງຂອງຊາຕານ ແລະ ຜູ້ທີ່ສະແດງເຖິງເນື້ອໜັງ, ພວກເຂົາເປັນຄົນທີ່ບໍ່ມີຄວາມຮູ້ ແລະ ຕໍ່າຊ້າ, ພວກເຂົາເປັນຄົນທີ່ໄຮ້ປະໂຫຍດ. ພວກເຂົາຈະບໍ່ເຫັນການມາຂອງຄວາມໂກດຮ້າຍຂອງພຣະເຈົ້າກ່ອນທີ່ພວກເຂົາຈະເຂົ້າໃຈວ່າ ພຣະເຈົ້າປະຕິບັດພາລະກິດຂອງພຣະອົງແນວໃດທ່າມກາງມະນຸດ ແລະ ຫຼັງຈາກທີ່ພວກເຂົາຖືກເອົາຊະນະຢ່າງສົມບູນ, ຄົນຊົ່ວ

ເຫຼົ່ານັ້ນກໍຈະໄດ້ຮັບຜົນກຳສະໜອງຂອງພວກເຂົາທັງໝົດ ແລະ ບໍ່ມີຜູ້ໃດໃນພວກເຂົາຈະສາມາດໜີພົ້ນມື້ແຫ່ງການໂກດຮ້າຍໄດ້. ປັດຈຸບັນບໍ່ແມ່ນເວລາສຳລັບການລົງໂທດມະນຸດ, ແຕ່ເປັນເວລາສຳລັບການປະຕິບັດພາລະກິດແຫ່ງການເອົາຊະນະ, ນອກຈາກວ່າຈະມີຄົນທຳລາຍການຄຸ້ມຄອງຂອງພຣະເຈົ້າ, ໃນກໍລະນີດັ່ງກ່າວ ພວກເຂົາແມ່ນຈະຖືກລົງໂທດອີງຕາມຄວາມຮຸນແຮງຂອງການກະທຳຂອງພວກເຂົາ. ໃນລະຫວ່າງການຄຸ້ມຄອງມະນຸດຊາດຂອງພຣະເຈົ້າ, ທຸກຄົນທີ່ຢູ່ພາຍໃນກະແສຂອງພຣະວິນຍານບໍລິສຸດແມ່ນກ່ຽວຂ້ອງກັບພຣະເຈົ້າ. ຄົນທີ່ໜ້າລັງກຽດ ແລະ ຖືກປະຕິເສດໂດຍພຣະວິນຍານບໍລິສຸດແມ່ນດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຊາຕານ ແລະ ສິ່ງທີ່ພວກເຂົານຳໄປປະຕິບັດກໍບໍ່ກ່ຽວຂ້ອງກັບພຣະເຈົ້າ. ມີພຽງແຕ່ຄົນທີ່ຍອມຮັບພາລະກິດໃໝ່ຂອງພຣະເຈົ້າເທົ່ານັ້ນ ແລະ ຄົນທີ່ຮ່ວມມືກັບພຣະເຈົ້າທີ່ກ່ຽວຂ້ອງກັບພຣະເຈົ້າ, ຍ້ອນພາລະກິດຂອງພຣະເຈົ້າແມ່ນແນໃສ່ຄົນທີ່ຍອມຮັບມັນເທົ່ານັ້ນ ແລະ ບໍ່ໄດ້ແນໃສ່ທຸກຄົນ, ບໍ່ວ່າພວກເຂົາຍອມຮັບມັນ ຫຼື ບໍ່ກໍຕາມ. ພາລະກິດທີ່ພຣະເຈົ້າປະຕິບັດມີເປົ້າໝາຍສະເໝີ ແລະ ບໍ່ໄດ້ຖືກປະຕິບັດຕາມອຳເພີໃຈ. ຄົນທີ່ກ່ຽວພັນກັບຊາຕານແມ່ນບໍ່ເໝາະສົມທີ່ຈະເປັນພະຍານໃຫ້ກັບພຣະເຈົ້າ ແຮງໄກທີ່ພວກເຂົາຈະເໝາະສົມໃນການຮ່ວມມືກັບພຣະເຈົ້າ.

ແຕ່ລະຂັ້ນຕອນຂອງພາລະກິດຂອງພຣະວິນຍານບໍລິສຸດແມ່ນຕ້ອງການຄຳພະຍານຂອງມະນຸດ. ແຕ່ລະຂັ້ນຕອນຂອງພາລະກິດແມ່ນການສູ້ຮົບລະຫວ່າງພຣະເຈົ້າ ແລະ ຊາຕານ ແລະ ເປົ້າໝາຍຂອງການສູ້ຮົບກໍຄືຊາຕານ ໃນຂະນະທີ່ຄົນທີ່ຈະຖືກເຮັດໃຫ້ສົມບູນໂດຍພາລະກິດນີ້ແມ່ນມະນຸດ. ບໍ່ວ່າພາລະກິດຂອງພຣະເຈົ້າຈະເກີດຜົນ ຫຼື ບໍ່ ແມ່ນຂຶ້ນກັບລັກສະນະຂອງການເປັນພະຍານຂອງມະນຸດທີ່ມີຕໍ່ພຣະເຈົ້າ. ການເປັນພະຍານນີ້ແມ່ນສິ່ງທີ່ພຣະເຈົ້າຮຽກຮ້ອງຈາກຄົນທີ່ຕິດຕາມພຣະອົງ; ມັນຄືການເປັນພະຍານທີ່ເກີດຂຶ້ນຕໍ່ໜ້າຊາຕານ ແລະ ຍັງເປັນເຄື່ອງພິສູດເຖິງຜົນສະທ້ອນຂອງພາລະກິດຂອງພຣະອົງ. ການຄຸ້ມຄອງທັງໝົດຂອງພຣະເຈົ້າແບ່ງອອກເປັນສາມຍຸກ ແລະ ເງື່ອນໄຂທີ່ເໝາະສົມໃນແຕ່ລະຍຸກ ແມ່ນປະກອບດ້ວຍມະນຸດ. ນອກນັ້ນເມື່ອຍຸກຕ່າງໆຜ່ານໄປ ແລະ ພັດທະນາຂຶ້ນ, ເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຕໍ່ມະນຸດຊາດທັງປວງກໍສູງຂຶ້ນເລື້ອຍໆ. ດ້ວຍເຫດນີ້ ພາລະກິດຂອງການຄຸ້ມຄອງຂອງພຣະເຈົ້າ ແຕ່ລະຍຸກຈຶ່ງປະຕິບັດເຖິງຂັ້ນສູງສຸດ ເທື່ອລະບາດກ້າວ ຈົນກວ່າມະນຸດຈະເຫັນຄວາມຈິງຂອງ "ການປາກົດແຫ່ງພຣະທຳໃນເນື້ອຫນັງ" ແລະ ໃນວິທີນີ້ ເງື່ອນໄຂຂອງມະນຸດກໍຈະຍິ່ງເພີ່ມທະວີຂຶ້ນ ແລະ ເງື່ອນໄຂຂອງມະນຸດໃນການເປັນປະຈັກພະຍານກໍຈະສູງຂຶ້ນເຊັ່ນກັນ. ຍິ່ງມະນຸດສາມາດຮ່ວມມືກັບພຣະເຈົ້າຢ່າງແທ້ຈິງຫຼາຍສ່ຳໃດ, ພຣະເຈົ້າກໍ່ຍິ່ງໄດ້ຮັບສະຫງ່າລາສີຫຼາຍສ່ຳນັ້ນ. ການຮ່ວມມືຂອງມະນຸດຄືການເປັນພະຍານທີ່ເຂົາຈຳເປັນຕ້ອງມີ ແລະ ການເປັນພະຍານທີ່ເຂົາມີກໍຄືການປະຕິບັດຂອງມະນຸດ. ດ້ວຍເຫດນັ້ນ ບໍ່ວ່າພາລະກິດຂອງພຣະເຈົ້າຈະມີຜົນທັນທີ ຫຼື ບໍ່ ແລະ ບໍ່ວ່າຈະສາມາດມີຄຳພະຍານທີ່ແທ້ຈິງໄດ້ ຫຼື ບໍ່ ແມ່ນກ່ຽວໂຍງກັບການຮ່ວມມື ແລະ ການເປັນພະຍານຂອງມະນຸດໂດຍຕັດຂາດຈາກກັນບໍ່ໄດ້. ເມື່ອພາລະກິດຖືກເຮັດໃຫ້ສຳເລັດ ເຊິ່ງໝາຍຄວາມວ່າ ເມື່ອການຄຸ້ມຄອງທັງໝົດຂອງພຣະເຈົ້າເຖິງຈຸດສິ້ນສຸດແລ້ວ, ມະນຸດຈຳເປັນຕ້ອງເປັນພະຍານໃຫ້ສູງຂຶ້ນ

ແລະ ເມື່ອພາລະກິດຂອງພຣະເຈົ້າເຖິງຈຸດສິ້ນສຸດ, ການປະຕິບັດ ແລະ ການເຂົ້າສູ່ຂອງມະນຸດຈະເຖິງຈຸດສູງສຸດ. ຜ່ານມາ ເງື່ອນໄຂຂອງມະນຸດແມ່ນຕ້ອງປະຕິບັດຕາມກົດໝາຍ ແລະ ພຣະບັນຍັດ ແລະ ຕ້ອງເປັນຄົນອົດທົນ ແລະ ອ່ອນນ້ອມຖ່ອມຕົນ. ໃນປັດຈຸບັນ ມະນຸດຕ້ອງເຊື່ອຟັງ ການຈັດແຈງຂອງພຣະເຈົ້າທັງໝົດ ແລະ ຕ້ອງມີຄວາມຮັກຢ່າງໃຫຍ່ຫຼວງຕໍ່ພຣະເຈົ້າ ແລະ ໃນທີ່ສຸດ ບໍ່ວ່າຈະຢູ່ໃນສະພາບທຸກຍາກລຳບາກພຽງໃດກໍຕາມ ເຂົາກໍຕ້ອງຍັງຮັກພຣະເຈົ້າສະເໝີ. ທັງສາມຍຸກເຫຼົ່ານີ້ແມ່ນເງື່ອນໄຂທີ່ພຣະເຈົ້າຮຽກຮ້ອງຈາກມະນຸດ, ເທື່ອລະບາດກ້າວ ຕະຫຼອດການຄຸ້ມຄອງທັງໝົດຂອງພຣະອົງ. ພາລະກິດແຕ່ລະຂັ້ນຕອນຂອງພຣະເຈົ້າແມ່ນດຳເນີນໜັກຂຶ້ນກວ່າເກົ່າ ແລະ ເງື່ອນໄຂຂອງມະນຸດໃນແຕ່ລະຂັ້ນຕອນກໍເລິກເຊິ່ງຂຶ້ນກວ່າເກົ່າ. ດ້ວຍວິທີນີ້ ການຄຸ້ມຄອງທັງໝົດຂອງພຣະເຈົ້າຈຶ່ງຄ່ອຍໆເປັນຮູບຮ່າງຂຶ້ນ. ມັນແມ່ນຍ້ອນເງື່ອນໄຂຂອງມະນຸດສູງຂຶ້ນທີ່ເຮັດໃຫ້ອຸປະນິໄສຂອງມະນຸດໃກ້ຄຽງກັບມາດຕະຖານທີ່ພຣະເຈົ້າກຳນົດໄວ້ ແລະ ຍ້ອນສາເຫດດັ່ງກ່າວນີ້ມະນຸດຊາດທັງໝົດຈຶ່ງເລີ່ມຄ່ອຍໆຫຼຸດພົ້ນອອກຈາກອິທິພົນຂອງຊາຕານ, ຈົນກວ່າເມື່ອພາລະກິດຂອງພຣະເຈົ້ານັ້ນຈະສິ້ນສຸດລົງຢ່າງສົມບູນ, ມວນມະນຸດຊາດຈຶ່ງຈະຖືກຊ່ວຍໃຫ້ລອດພົ້ນຈາກອິທິພົນຂອງຊາຕານໄດ້. ເມື່ອເວລານັ້ນມາເຖິງ, ພາລະກິດຂອງພຣະເຈົ້າກໍຈະເຖິງຈຸດສິ້ນສຸດ ແລະ ການຮ່ວມມືຂອງມະນຸດກັບພຣະເຈົ້າເພື່ອບັນລຸການປ່ຽນແປງໃນອຸປະນິໄສຂອງເຂົາກໍຈະບໍ່ມີຢູ່ອີກ ແລະ ມະນຸດຊາດທັງປວງກໍຈະດຳລົງຊີວິດຢູ່ໃນແສງສະຫວ່າງຂອງພຣະເຈົ້າ ແລະ ຈາກນັ້ນເປັນຕົ້ນໄປ ກໍຈະບໍ່ມີການກະບົດ ຫຼື ການຕໍ່ຕ້ານພຣະເຈົ້າ. ພຣະເຈົ້າຈະບໍ່ຮຽກຮ້ອງຈາກມະນຸດອີກ ແລະ ຈະມີການຮ່ວມມືຢ່າງປອງດອງລະຫວ່າງມະນຸດ ແລະ ພຣະເຈົ້າຫຼາຍຂຶ້ນ ເຊິ່ງຈະເປັນຊີວິດຂອງມະນຸດ ແລະ ພຣະເຈົ້າຢູ່ຮ່ວມກັນ, ຊີວິດທີ່ມາຈາກການຄຸ້ມຄອງຂອງພຣະເຈົ້າແມ່ນຖືກເຮັດໃຫ້ສຳເລັດຢ່າງສົມບູນ ແລະ ຫຼັງຈາກທີ່ມະນຸດຖືກພຣະເຈົ້າຊ່ວຍໃຫ້ລອດພົ້ນຈາກການຈັບກຸມຂອງຊາຕານ. ຄົນທີ່ບໍ່ສາມາດຕິດຕາມບາດກ້າວຂອງພຣະເຈົ້າຢ່າງໃກ້ຊິດແມ່ນບໍ່ສາມາດບັນລຸຊີວິດດັ່ງກ່າວໄດ້. ພວກເຂົາຈະປ່ອຍໃຫ້ຕົນເອງຕົກລົງສູ່ຄວາມມືດ ເຊິ່ງເປັນບ່ອນທີ່ພວກເຂົາຈະຮ້ອງໄຫ້ ແລະ ກັດແຂ້ວຂອງພວກເຂົາ; ພວກເຂົາເປັນຄົນທີ່ເຊື່ອໃນພຣະເຈົ້າ ແຕ່ບໍ່ຕິດຕາມພຣະອົງ ຜູ້ທີ່ເຊື່ອໃນພຣະເຈົ້າ ແຕ່ບໍ່ເຊື່ອຟັງພາລະກິດທັງໝົດຂອງພຣະອົງ. ໃນເມື່ອມະນຸດເຊື່ອໃນພຣະເຈົ້າ, ເຂົາກໍຕ້ອງຕິດຕາມບາດກ້າວຂອງພຣະເຈົ້າເທື່ອລະບາດກ້າວຢ່າງໃກ້ຊິດ; ເຂົາຄວນ "ຕິດຕາມພຣະເມສານ້ອຍບໍ່ວ່າພຣະອົງຈະໄປໃສກໍຕາມ". ມີພຽງແຕ່ຄົນເຫຼົ່ານີ້ທີ່ເປັນຄົນສະແຫວງຫາຫົນທາງທີ່ແທ້ຈິງ, ມີພຽງແຕ່ພວກເຂົາເທົ່ານັ້ນທີ່ຮູ້ຈັກພາລະກິດຂອງພຣະວິນຍານບໍລິສຸດ. ຄົນທີ່ຕິດຕາມຕົວອັກສອນ ແລະ ຄຳສັ່ງສອນຄືກັບທາດ ແມ່ນຄົນທີ່ຖືກກຳຈັດໂດຍພາລະກິດຂອງພຣະວິນຍານບໍລິສຸດ. ໃນແຕ່ລະໄລຍະຂອງເວລາ, ພຣະເຈົ້າຈະເລີ່ມຕົ້ນພາລະກິດໃໝ່ ແລະ ໃນແຕ່ລະໄລຍະຈະມີການເລີ່ມຕົ້ນໃໝ່ທ່າມກາງມະນຸດ. ຖ້າມະນຸດພຽງແຕ່ປະຕິບັດຕາມຄວາມຈິງທີ່ວ່າ "ພຣະເຢໂຮວາເປັນພຣະເຈົ້າ" ແລະ "ພຣະເຢຊູເປັນພຣະຄຣິດ" ເຊິ່ງເປັນຄວາມຈິງທີ່ພຽງແຕ່ໃຊ້ໄດ້ກັບຍຸກທີ່ກ່ຽວຂ້ອງ, ແລ້ວມະນຸດກໍຈະນຳບໍ່ທັນພາລະກິດຂອງພຣະວິນຍານບໍລິສຸດໄດ້ຈັກເທື່ອ ແລະ ຈະບໍ່ສາມາດຮັບເອົາພາລະກິດຂອງພຣະວິນຍານບໍລິສຸດຕະຫຼອດໄປ. ບໍ່ວ່າພຣະເຈົ້າຈະ

ປະຕິບັດພາລະກິດແນວໃດກໍຕາມ, ມະນຸດກໍຕິດຕາມໂດຍບໍ່ສົງໄສແມ່ນແຕ່ໜ້ອຍດຽວ ແລະ ເຂົາກໍຕິດຕາມຢ່າງໃກ້ຊິດ. ໃນວິທີນີ້, ມະນຸດຈະສາມາດຖືກພຣະວິນຍານບໍລິສຸດກຳຈັດໄດ້ແນວໃດ? ບໍ່ວ່າພຣະເຈົ້າຈະເຮັດຫຍັງກໍຕາມ, ຕາບໃດທີ່ມະນຸດໝັ້ນໃຈວ່າ ນັ້ນແມ່ນພາລະກິດຂອງພຣະວິນຍານບໍລິສຸດ ແລະ ຮ່ວມມືໃນພາລະກິດຂອງພຣະວິນຍານບໍລິສຸດໂດຍບໍ່ມີຂໍ້ສົງໄສໃດໆແລ້ວ ແລະພະຍາຍາມບັນລຸເງື່ອນໄຂຂອງພຣະເຈົ້າ, ແລ້ວເຂົາຈະຖືກລົງໂທດໄດ້ແນວໃດ? ພາລະກິດຂອງພຣະເຈົ້າບໍ່ເຄີຍຢຸດຈັກເທື່ອ, ບາດກ້າວຂອງພຣະອົງບໍ່ເຄີຍຢຸດສະງັດຈັກເທື່ອ ແລະ ກ່ອນການສຳເລັດພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ, ພຣະອົງຫຍຸ້ງຢູ່ສະເໝີ ແລະ ບໍ່ເຄີຍຢຸດຈັກເທື່ອ. ແຕ່ມະນຸດແມ່ນແຕກຕ່າງ: ເມື່ອໄດ້ຮັບພຽງແຕ່ຈຳນວນເລັກນ້ອຍຂອງພາລະກິດຂອງພຣະວິນຍານບໍລິສຸດ, ເຂົາກໍປະຕິບັດຕໍ່ສິ່ງນັ້ນຄືກັບວ່າມັນຈະບໍ່ປ່ຽນແປງຈັກເທື່ອ; ເມື່ອໄດ້ຮັບຄວາມຮູ້ເລັກນ້ອຍ, ເຂົາກໍບໍ່ສືບຕໍ່ຕິດຕາມບາດກ້າວພາລະກິດທີ່ໃໝ່ກວ່າຂອງພຣະເຈົ້າ; ເມື່ອໄດ້ເຫັນພຽງແຕ່ສ່ວນເລັກນ້ອຍໃນພາລະກິດຂອງພຣະເຈົ້າ, ເຂົາກໍກຳນົດໃຫ້ພຣະເຈົ້າເປັນຮ່າງໄມ້ພິເສດທັນທີ ແລະ ເຊື່ອວ່າພຣະເຈົ້າຈະຍັງຄົງຢູ່ໃນຮູບຮ່າງນີ້ທີ່ເຂົາເຫັນຢູ່ຕໍ່ໜ້າເຂົາ, ເຊິ່ງມັນເປັນແບບນີ້ໃນອະດີດ ແລະ ຈະເປັນແບບນີ້ໃນອະນາຄົດ; ເມື່ອໄດ້ຮັບພຽງແຕ່ຄວາມຮູ້ຜິວເຜີນ, ມະນຸດກໍພູມໃຈຈົນເຂົາລືມຕົນເອງ ແລະ ເລີ່ມປະກາດແບບບໍ່ມີເຫດຜົນເຖິງອຸປະນິໄສ ແລະ ຄວາມເປັນຢູ່ຂອງພຣະເຈົ້າວ່າບໍ່ມີຢູ່ຈິງແທ້; ແລະ ເມື່ອໝັ້ນໃຈກ່ຽວກັບຂັ້ນຕອນໜຶ່ງໃນພາລະກິດຂອງພຣະວິນຍານບໍລິສຸດ, ບໍ່ວ່າຄົນທີ່ປະກາດພາລະກິດໃໝ່ຂອງພຣະເຈົ້າຈະເປັນຄົນປະເພດໃດກໍຕາມ, ມະນຸດກໍບໍ່ຍອມຮັບມັນ. ນີ້ແມ່ນຄົນທີ່ບໍ່ສາມາດຍອມຮັບພາລະກິດໃໝ່ຂອງພຣະວິນຍານບໍລິສຸດ; ພວກເຂົາຫົວບູຮານເກີນໄປ ແລະ ບໍ່ສາມາດຍອມຮັບສິ່ງໃໝ່ໄດ້. ຄົນປະເພດດັ່ງກ່າວແມ່ນຄົນທີ່ເຊື່ອໃນພຣະເຈົ້າ ແຕ່ຍັງປະຕິເສດພຣະເຈົ້າ. ມະນຸດເຊື່ອວ່າ ຊາວອິດສະຣາເອນແມ່ນຜິດທີ່ "ເຊື່ອໃນພຣະເຢໂຮວາເທົ່ານັ້ນ ແລະ ບໍ່ເຊື່ອໃນພຣະເຢຊູ" ແຕ່ຄົນສ່ວນໃຫຍ່ກໍສະແດງບົດບາດທີ່ພວກເຂົາ "ເຊື່ອໃນພຣະເຢໂຮວາເທົ່ານັ້ນ ແລະ ປະຕິເສດພຣະເຢຊູ" ແລະ "ປາຖະໜາເຖິງການກັບມາຂອງພຣະເມຊີອາ, ແຕ່ຕໍ່ຕ້ານພຣະເມຊີອາຜູ້ທີ່ຖືກເອີ້ນວ່າ ພຣະເຢຊູ". ແລ້ວບໍ່ແປກໃຈເລີຍທີ່ຜູ້ຄົນຍັງດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານຫຼັງຈາກທີ່ຍອມຮັບໜຶ່ງຂັ້ນຕອນຂອງພາລະກິດຂອງພຣະວິນຍານບໍລິສຸດ ແລະ ຍັງບໍ່ໄດ້ຮັບພອນຂອງພຣະເຈົ້າ. ນີ້ບໍ່ແມ່ນຜົນຂອງການກະບົດຂອງມະນຸດບໍ? ຊາວຄຣິດສະຕຽນທົ່ວໂລກທີ່ນຳບໍ່ທັນພາລະກິດໃໝ່ແຫ່ງປັດຈຸບັນ ລ້ວນແລ້ວແຕ່ຍຶດຕິດກັບຄວາມຫວັງທີ່ວ່າ ພວກເຂົາຈະໄດ້ໂຊກດີ ແລະ ສົມມຸດວ່າພຣະເຈົ້າຈະເຮັດໃຫ້ຄວາມປາຖະໜາແຕ່ລະຢ່າງຂອງພວກເຂົາສຳເລັດ. ແຕ່ພວກເຂົາບໍ່ສາມາດເວົ້າໄດ້ຢ່າງໝັ້ນໃຈວ່າ ເປັນຫຍັງພຣະເຈົ້າຈຶ່ງພາພວກເຂົາຂຶ້ນສູ່ສະຫວັນຊັ້ນສາມ ຫຼື ພວກເຂົາບໍ່ໝັ້ນໃຈວ່າ ພຣະເຢຊູຈະມາເພື່ອຮັບເອົາພວກເຂົາຂີ່ເທິງເມກສີຂາວໄດ້ແນວໃດ, ແຮງໄກທີ່ພວກເຂົາຈະເວົ້າດ້ວຍຄວາມໝັ້ນໃຈທີ່ສຸດວ່າ ພຣະເຢຊູມາເທິງເມກສີຂາວແທ້ໆໃນມື້ທີ່ພວກເຂົາຈິນຕະນາການ ຫຼື ບໍ່. ພວກເຂົາທຸກຄົນວິຕົກກັງວົນ ແລະ ເຮັດຫຍັງບໍ່ຖືກ; ພວກເຂົາເອງຍິ່ງບໍ່ຮູ້ຈັກວ່າ ພຣະເຈົ້າຈະພາພວກເຂົາແຕ່ລະຄົນທີ່ເປັນຄົນກຸ່ມນ້ອຍໆທີ່ມີຄວາມຫຼາກຫຼາຍ ຜູ້ທີ່ມາຈາກແຕ່ລະນິກາຍຂຶ້ນໄປ ຫຼື ບໍ່. ພາລະກິດທີ່ພຣະເຈົ້າ

ປະຕິບັດໃນຕອນນີ້, ໃນຍຸກປັດຈຸບັນ, ຄວາມປະສົງຂອງພຣະເຈົ້າ, ພວກເຂົາບໍ່ເຂົ້າໃຈສິ່ງເຫຼົ່ານີ້ ແລະ ບໍ່ສາມາດເຮັດຫຍັງໄດ້ນອກຈາກນັບມື້ດ້ວຍນິ້ວມືຂອງພວກເຂົາ. ມີພຽງແຕ່ຄົນທີ່ຕິດຕາມບາດກ້າວຂອງພຣະເມສານ້ອຍຈົນເຖິງເວລາສຸດທ້າຍເທົ່ານັ້ນ ຈຶ່ງຈະສາມາດຮັບເອົາພອນສຸດທ້າຍໄດ້, ໃນຂະນະທີ່ "ຄົນສະຫຼາດ" ເຫຼົ່ານັ້ນ ທີ່ບໍ່ສາມາດຕິດຕາມຈົນເຖິງເວລາສຸດທ້າຍ ແຕ່ຍັງເຊື່ອວ່າພວກເຂົາຈະໄດ້ຮັບທັງໝົດ ແມ່ນບໍ່ສາມາດເປັນພະຍານເຖິງການປາກົດຕົວຂອງພຣະເຈົ້າໄດ້. ພວກເຂົາທຸກຄົນເຊື່ອວ່າ ພວກເຂົາເປັນຄົນສະຫຼາດທີ່ສຸດເທິງແຜ່ນດິນໂລກ ແລະ ພວກເຂົາຢຸດການພັດທະນາທີ່ສືບເນື່ອງຂອງພາລະກິດຂອງພຣະເຈົ້າໂດຍບໍ່ມີເຫດຜົນເລີຍ ແລະ ເບິ່ງຄືກັບວ່າ ພວກເຂົາເຊື່ອດ້ວຍຄວາມໝັ້ນໃຈທີ່ສຸດວ່າ ພຣະເຈົ້າຈະພາພວກເຂົາຜູ້ທີ່ "ມີຄວາມຊື່ສັດທີ່ສຸດຕໍ່ພຣະເຈົ້າ, ຕິດຕາມພຣະເຈົ້າ ແລະ ປະຕິບັດຕາມພຣະທຳຂອງພຣະເຈົ້າ" ຂຶ້ນສູ່ສະຫວັນ. ເຖິງແມ່ນວ່າພວກເຂົາມີ "ຄວາມຊື່ສັດທີ່ສຸດ" ຕໍ່ພຣະທຳທີ່ພຣະເຈົ້າກ່າວ, ຄຳເວົ້າ ແລະ ການກະທຳຂອງພວກເຂົາກໍຍັງເປັນຕາລັງກຽດຫຼາຍ ເພາະພວກເຂົາຕໍ່ຕ້ານພາລະກິດຂອງພຣະວິນຍານບໍລິສຸດ ແລະ ເຮັດການຫຼອກລວງ ແລະ ການຊົ່ວຮ້າຍ. ຄົນທີ່ບໍ່ຕິດຕາມຈົນເຖິງເວລາສຸດທ້າຍ, ຄົນທີ່ນຳບໍ່ທັນພາລະກິດຂອງພຣະວິນຍານບໍລິສຸດ ແລະ ຄົນທີ່ພຽງແຕ່ຍຶດຕິດກັບພາລະກິດເດີມ ແມ່ນບໍ່ພຽງແຕ່ບໍ່ສາມາດບັນລຸຄວາມຊື່ສັດຕໍ່ພຣະເຈົ້າ, ແຕ່ໃນທາງກົງກັນຂ້າມ ແມ່ນໄດ້ກາຍເປັນຄົນທີ່ຕໍ່ຕ້ານພຣະເຈົ້າ, ໄດ້ກາຍເປັນຄົນທີ່ຖືກປະຕິເສດໃນຍຸກໃໝ່ ແລະ ເປັນຄົນທີ່ຈະຖືກລົງໂທດ. ມີຄົນທີ່ເປັນຕາເວດທະນາກວ່າພວກເຂົາຢູ່ບໍ? ຫຼາຍຄົນເຖິງກັບເຊື່ອວ່າ ທຸກຄົນທີ່ປະຕິເສດພຣະບັນຍັດເດີມ ແລະ ຍອມຮັບພາລະກິດໃໝ່ແມ່ນບໍ່ມີຄວາມສຳນຶກ. ຄົນເຫຼົ່ານີ້ ທີ່ພຽງແຕ່ເວົ້າເຖິງ "ຄວາມສຳນຶກ" ແລະ ບໍ່ຮູ້ຈັກວ່າພາລະກິດຂອງພຣະວິນຍານບໍລິສຸດຈະຖືກຄວາມສຳນຶກຂອງພວກເຂົາເອງຕັດຄວາມຄາດຫວັງຂອງພວກເຂົາໃນທີ່ສຸດ. ພາລະກິດຂອງພຣະເຈົ້າບໍ່ໄດ້ປະຕິບັດຕາມຄຳສັ່ງສອນ ແລະ ເຖິງແມ່ນວ່າມັນເປັນພາລະກິດຂອງພຣະອົງເອງ, ແຕ່ພຣະເຈົ້າກໍຍັງບໍ່ຍຶດຕິດກັບມັນ. ສິ່ງທີ່ຄວນຖືກປະຕິເສດກໍຖືກປະຕິເສດ, ສິ່ງທີ່ຄວນຖືກກຳຈັດກໍຖືກກຳຈັດ. ແຕ່ມະນຸດເຮັດໃຫ້ຕົນເອງເປັນສັດຕູກັບພຣະເຈົ້າໂດຍຍຶດຕິດພຽງແຕ່ສ່ວນເລັກນ້ອຍດຽວຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ. ນີ້ບໍ່ແມ່ນຄວາມບໍ່ມີເຫດຜົນຂອງມະນຸດບໍ? ນີ້ບໍ່ແມ່ນຄວາມໂງ່ຈ້າຂອງມະນຸດບໍ? ຍິ່ງຜູ້ຄົນບໍ່ກ້າ ແລະ ລະມັດລະວັງເກີນໄປຍ້ອນພວກເຂົາຢ້ານບໍ່ໄດ້ຮັບພອນຂອງພຣະເຈົ້າຫຼາຍສໍ່າໃດ, ພວກເຂົາກໍຍິ່ງບໍ່ສາມາດໄດ້ຮັບພອນທີ່ຍິ່ງໃຫຍ່ຫຼາຍສໍ່ານັ້ນ ແລະ ບໍ່ສາມາດໄດ້ຮັບພອນສຸດທ້າຍ. ຄົນເຫຼົ່ານີ້ທີ່ປະຕິບັດຕາມພຣະບັນຍັດຢ່າງທາດ ກໍລ້ວນແລ້ວແຕ່ສະແດງຄວາມຊື່ສັດທີ່ສຸດຕໍ່ພຣະບັນຍັດ ແລະ ຍິ່ງພວກເຂົາສະແດງຄວາມຊື່ສັດດັ່ງກ່າວຕໍ່ພຣະບັນຍັດຫຼາຍສໍ່າໃດ, ພວກເຂົາກໍຍິ່ງເປັນກະບົດທີ່ຕໍ່ຕ້ານພຣະເຈົ້າຫຼາຍສໍ່ານັ້ນ. ຍ້ອນປັດຈຸບັນແມ່ນຍຸກແຫ່ງອານາຈັກ ແລະ ບໍ່ແມ່ນຍຸກແຫ່ງພຣະບັນຍັດ ແລະ ພາລະກິດໃນປັດຈຸບັນ ແລະ ພາລະກິດໃນອະດີດກໍບໍ່ສາມາດກ່າວໃນລົມຫາຍໃຈດຽວກັນ ຫຼື ພາລະກິດໃນອະດີດແມ່ນບໍ່ສາມາດປຽບທຽບກັບພາລະກິດໃນປັດຈຸບັນໄດ້. ພາລະກິດຂອງພຣະເຈົ້າໄດ້ປ່ຽນແປງໄປ ແລະ ການປະຕິບັດຂອງມະນຸດກໍໄດ້ປ່ຽນແປງໄປເຊັ່ນກັນ; ມັນບໍ່ແມ່ນການຍຶດຕິດກັບພຣະບັນຍັດ ຫຼື ແບກໄມ້ກາງແຂນ. ສະນັ້ນ ຄວາມຊື່ສັດຂອງ

ຜູ້ຄົນຕໍ່ພຣະບັນຍັດ ແລະ ໄມ້ກາງແຂນແມ່ນຈະບໍ່ໄດ້ຮັບການເຫັນດີຈາກພຣະເຈົ້າ.

ມະນຸດຈະຖືກເຮັດໃຫ້ສົມບູນທັງໝົດໃນຍຸກແຫ່ງອານາຈັກ. ຫຼັງຈາກພາລະກິດແຫ່ງການເອົາຊະນະ, ມະນຸດຈະຕົກຢູ່ໃນການຫຼໍ່ຫຼອມ ແລະ ຄວາມລຳບາກຍາກແຄ້ນ. ຄົນທີ່ສາມາດເອົາຊະນະ ແລະ ຢືນເປັນພະຍານໃນລະຫວ່າງຄວາມລຳບາກຍາກແຄ້ນນີ້ ແມ່ນຄົນທີ່ຈະຖືກເຮັດໃຫ້ສົມບູນໃນທີ່ສຸດ; ພວກເຂົາເປັນຜູ້ເອົາຊະນະ. ໃນລະຫວ່າງຄວາມລຳບາກຍາກແຄ້ນ, ມະນຸດຈຳເປັນຕ້ອງຍອມຮັບການຫຼໍ່ຫຼອມນີ້ ແລະ ການຫຼໍ່ຫຼອມນີ້ແມ່ນກໍລະນີສຸດທ້າຍຂອງພາລະກິດຂອງພຣະເຈົ້າ. ມັນເປັນຄັ້ງສຸດທ້າຍທີ່ມະນຸດຈະຖືກຫຼໍ່ຫຼອມກ່ອນການສິ້ນສຸດພາລະກິດແຫ່ງການຄຸ້ມຄອງທັງໝົດຂອງພຣະເຈົ້ານັ້ນ ແລະ ທຸກຄົນທີ່ຕິດຕາມພຣະເຈົ້າກໍຕ້ອງຍອມຮັບການທົດສອບສຸດທ້າຍນີ້ ແລະ ຕ້ອງຍອມຮັບການຫຼໍ່ຫຼອມຄັ້ງສຸດທ້າຍນີ້. ຄົນທີ່ຖືກອ້ອມລ້ອມໄປດ້ວຍຄວາມລຳບາກຍາກແຄ້ນແມ່ນປາສະຈາກພາລະກິດຂອງພຣະວິນຍານບໍລິສຸດ ແລະ ການນຳພາຂອງພຣະເຈົ້າ, ແຕ່ຄົນທີ່ຖືກເອົາຊະນະຢ່າງແທ້ຈິງ ແລະ ສະແຫວງຫາພຣະເຈົ້າຢ່າງແທ້ຈິງຈະໝັ້ນຄົງໃນທີ່ສຸດ; ພວກເຂົາເປັນຄົນທີ່ມີຄວາມເປັນມະນຸດ ແລະ ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ. ບໍ່ວ່າພຣະເຈົ້າຈະເຮັດຫຍັງກໍຕາມ, ຄົນເຫຼົ່ານີ້ທີ່ມີໄຊຊະນະຈະບໍ່ປາສະຈາກນິມິດ ແລະ ຍັງຈະນຳຄວາມຈິງເຂົ້າສູ່ການປະຕິບັດພ້ອມກັບການເປັນພະຍານຂອງພວກເຂົາ. ພວກເຂົາຄືຜູ້ທີ່ຈະລອດພົ້ນຈາກຄວາມລຳບາກຍາກແຄ້ນທີ່ຍິ່ງໃຫຍ່ໃນທີ່ສຸດ. ເຖິງແມ່ນວ່າຄົນທີ່ຕົກເບັດໃນນໍ້າຂຸ່ນຍັງສາມາດສວຍໂອກາດໃນປັດຈຸບັນ, ແຕ່ ບໍ່ມີໃຜສາມາດຫຼີບໜີຄວາມລຳບາກຍາກແຄ້ນສຸດທ້າຍໄດ້ ແລະ ບໍ່ມີໃຜສາມາດຫຼີບໜີການທົດສອບສຸດທ້າຍໄດ້. ສຳລັບຄົນທີ່ເອົາຊະນະ, ຄວາມລຳບາກຍາກແຄ້ນດັ່ງກ່າວເປັນການຫຼໍ່ຫຼອມທີ່ໃຫຍ່ຫຼວງ; ແຕ່ສຳລັບຄົນທີ່ຕົກເບັດໃນນໍ້າຂຸ່ນ, ມັນເປັນພາລະກິດແຫ່ງການໂຍນອອກໂດຍສິ້ນເຊີງ. ບໍ່ວ່າພວກເຂົາຈະຖືກທົດລອງແນວໃດກໍຕາມ, ຄວາມຈົງຮັກພັກດີຂອງຄົນທີ່ມີພຣະເຈົ້າໃນຫົວໃຈຂອງພວກເຂົາກໍຍັງບໍ່ປ່ຽນແປງ; ແຕ່ສຳລັບຄົນທີ່ບໍ່ມີພຣະເຈົ້າຢູ່ໃນຫົວໃຈຂອງພວກເຂົາ, ຫຼັງຈາກທີ່ພາລະກິດຂອງພຣະເຈົ້າບໍ່ມີປະໂຫຍດຕໍ່ເນື້ອໜັງຂອງພວກເຂົາ, ພວກເຂົາກໍປ່ຽນມຸມມອງກ່ຽວກັບພຣະເຈົ້າ ແລະ ເຖິງກັບໜີອອກຈາກພຣະເຈົ້າ. ຄົນດັ່ງກ່າວແມ່ນຄົນທີ່ຈະບໍ່ໝັ້ນຄົງໃນທີ່ສຸດ, ເປັນຄົນທີ່ພຽງແຕ່ສະແຫວງຫາພອນຂອງພຣະເຈົ້າ ແລະ ບໍ່ປາຖະໜາທີ່ຈະເສຍສະຫຼະຕົນເອງເພື່ອພຣະເຈົ້າ ແລະ ອຸທິດຕົນເອງໃຫ້ກັບພຣະອົງ. ຄົນຕໍ່າຊ້າດັ່ງກ່າວນີ້ຈະຖືກຂັບໄລ່ໜີທັງໝົດ ເມື່ອພາລະກິດຂອງພຣະເຈົ້າມາເຖິງຈຸດສິ້ນສຸດ ແລະ ພວກເຂົາບໍ່ສົມຄວນແກ່ການເຫັນອົກເຫັນໃຈໃດໆເລີຍ. ຄົນທີ່ປາສະຈາກຄວາມເປັນມະນຸດແມ່ນບໍ່ສາມາດຮັກພຣະເຈົ້າຢ່າງແທ້ຈິງ. ເມື່ອສະພາບແວດລ້ອມປອດໄພ ແລະ ໝັ້ນຄົງ ຫຼື ພວກເຂົາສາມາດຮັບຜົນປະໂຫຍດ, ພວກເຂົາກໍເຊື່ອຟັງພຣະເຈົ້າໃນທຸກສິ່ງ, ແຕ່ຫຼັງຈາກສິ່ງທີ່ພວກເຂົາປາຖະໜານັ້ນຕົກຢູ່ໃນອັນຕະລາຍ ຫຼື ຖືກໂຕ້ແຍ້ງໃນທີ່ສຸດ, ພວກເຂົາກໍກະບົດທັນທີ. ແມ່ນແຕ່ໃນຊ່ວງເວລາພຽງແຕ່ຄືນດຽວ, ພວກເຂົາອາດປ່ຽນຈາກຄົນທີ່ຍິ້ມແຍ້ມ ແລະ “ໃຈດີ” ມາເປັນຄາດຕະກອນທີ່ຂີ້ຮ້າຍ ແລະ ໂຫດຮ້າຍ, ປະຕິບັດຕໍ່ຜູ້ອຸປະກາລະຂອງພວກເຂົາໃນມື້ວານຄືກັບສັດຕູທີ່ເອົາເປັນເອົາຕາຍທັນທີ ໂດຍບໍ່ມີຄວາມສອດຄ່ອງ ຫຼື ເຫດຜົນ. ຖ້າຜີຮ້າຍເຫຼົ່ານີ້ບໍ່ຖືກໂຍນອອກ, ຜີຮ້າຍເຫຼົ່ານີ້ຈະຂ້າພາຍໃນພິບຕາ,

ພວກເຂົາຈະບໍ່ກາຍເປັນຄວາມອັນຕະລາຍຢ່າງລັບໆບໍ? ພາລະກິດແຫ່ງການຊ່ວຍມະນຸດໃຫ້ລອດພົ້ນບໍ່ໄດ້ຖືກບັນລຸຫຼັງຈາກການສຳເລັດພາລະກິດແຫ່ງການເອົາຊະນະ. ເຖິງແມ່ນວ່າ ພາລະກິດແຫ່ງການເອົາຊະນະຈະສິ້ນສຸດລົງແລ້ວ, ພາລະກິດແຫ່ງການຊຳລະລ້າງຍັງບໍ່ໄດ້ສິ້ນສຸດລົງເທື່ອ; ພາລະກິດດັ່ງກ່າວຈະຖືກເຮັດໃຫ້ສຳເລັດຫຼັງຈາກທີ່ມະນຸດຖືກຊຳລະລ້າງທັງໝົດເທົ່ານັ້ນ, ຫຼັງຈາກທີ່ຄົນຍອມຕໍ່ພຣະເຈົ້າຖືກເຮັດໃຫ້ສົມບູນຢ່າງແທ້ຈິງ ແລະ ຫຼັງຈາກທີ່ຄົນປອມຕົວເຫຼົ່ານັ້ນທີ່ປາສະຈາກພຣະເຈົ້າໃນຫົວໃຈຂອງພວກເຂົາຖືກກວາດລ້າງ. ຄົນທີ່ບໍ່ພໍໃຈພຣະເຈົ້າໃນຂັ້ນຕອນສຸດທ້າຍຂອງພາລະກິດຂອງພຣະອົງຈະຖືກກຳຈັດທັງໝົດ ແລະ ຄົນທີ່ຖືກກຳຈັດແມ່ນພວກຜີຮ້າຍ. ເມື່ອພວກເຂົາບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້, ພວກເຂົາກໍກະບົດຕໍ່ພຣະເຈົ້າ ແລະ ເຖິງແມ່ນຄົນເຫຼົ່ານີ້ຕິດຕາມພຣະເຈົ້າໃນປັດຈຸບັນ, ແຕ່ສິ່ງນີ້ບໍ່ໄດ້ພິສູດວ່າ ພວກເຂົາເປັນຄົນທີ່ຈະຢູ່ລອດໃນທີ່ສຸດ. ໃນພຣະທຳທີ່ກ່າວວ່າ: "ຄົນທີ່ຕິດຕາມພຣະເຈົ້າຈົນເຖິງທີ່ສຸດຈະໄດ້ຮັບເອົາຄວາມລອດພົ້ນ" ຄວາມໝາຍຂອງຄຳວ່າ "ຕິດຕາມ" ຄືການຢືນຢ່າງໝັ້ນຄົງທ່າມກາງຄວາມລຳບາກຍາກແຄ້ນ. ໃນປັດຈຸບັນ, ຫຼາຍຄົນເຊື່ອວ່າການຕິດຕາມພຣະເຈົ້າເປັນສິ່ງທີ່ງ່າຍ, ແຕ່ເມື່ອພາລະກິດຂອງພຣະເຈົ້າກຳລັງຈະສິ້ນສຸດລົງ, ເຈົ້າຈະຮູ້ຄວາມໝາຍທີ່ແທ້ຈິງຂອງຄຳວ່າ "ຕິດຕາມ". ຍ້ອນເຈົ້າຍັງສາມາດຕິດຕາມພຣະເຈົ້າໃນປັດຈຸບັນຫຼັງຈາກທີ່ຖືກເອົາຊະນະ, ນີ້ກໍບໍ່ໄດ້ພິສູດວ່າ ເຈົ້າເປັນໜຶ່ງໃນຄົນທີ່ຈະຖືກເຮັດໃຫ້ສົມບູນ. ຄົນທີ່ບໍ່ສາມາດອົດທົນຕໍ່ການທົດລອງ, ຄົນທີ່ບໍ່ສາມາດເອົາໄຊຊະນະເໜືອຄວາມລຳບາກຍາກແຄ້ນ ຈະບໍ່ສາມາດຢືນຢ່າງໝັ້ນຄົງໃນທີ່ສຸດ ແລະ ສະນັ້ນກໍຈະບໍ່ສາມາດຕິດຕາມພຣະເຈົ້າຈົນເຖິງທີ່ສຸດ. ຄົນທີ່ຕິດຕາມພຣະເຈົ້າຢ່າງແທ້ຈິງແມ່ນສາມາດທົນທານຕໍ່ການທົດສອບໃນພາລະກິດຂອງພວກເຂົາ, ໃນຂະນະທີ່ຄົນທີ່ບໍ່ຕິດຕາມພຣະເຈົ້າຢ່າງແທ້ຈິງແມ່ນບໍ່ສາມາດທົນຕໍ່ການທົດລອງໃດໆຂອງພຣະເຈົ້າເລີຍ. ບໍ່ຊ້າກໍໄວ ພວກເຂົາຈະຖືກຂັບໄລ່ໜີ, ໃນຂະນະທີ່ຜູ້ເອົາຊະນະຈະຄົງຢູ່ໃນອານາຈັກ. ບໍ່ວ່າມະນຸດຈະສະແຫວງຫາພຣະເຈົ້າຢ່າງແທ້ຈິງ ຫຼື ບໍ່ ແມ່ນຖືກກຳນົດໂດຍການທົດສອບຂອງພາລະກິດຂອງເຂົາ ນັ້ນກໍຄື ການທົດລອງຂອງພຣະເຈົ້າ ແລະ ບໍ່ກ່ຽວຫຍັງກັບການຕັດສິນໃຈຂອງມະນຸດເອງ. ພຣະເຈົ້າບໍ່ປະຕິເສດບຸກຄົນໃດໜຶ່ງຕາມອຳເພີໃຈ; ທຸກສິ່ງທີ່ພຣະອົງເຮັດແມ່ນສາມາດເຮັດໃຫ້ມະນຸດເຊື່ອໄດ້ຢ່າງສິ້ນເຊີງ. ພຣະອົງບໍ່ເຮັດໃນສິ່ງໃດທີ່ມະນຸດບໍ່ສາມາດເຫັນໄດ້ ຫຼື ພາລະກິດໃດກໍຕາມທີ່ບໍ່ສາມາເຮັດໃຫ້ມະນຸດເຊື່ອໄດ້. ບໍ່ວ່າຄວາມເຊື່ອຂອງມະນຸດຈະຖືກຕ້ອງ ຫຼື ບໍ່ ແມ່ນຖືກພິສູດໂດຍຄວາມຈິງ ແລະ ບໍ່ສາມາດຕັດສິນໂດຍມະນຸດ. "ເຂົ້າສາລີບໍ່ສາມາດເຮັດໃຫ້ກາຍເປັນເຂົ້ານົກ ແລະ ເຂົ້ານົກບໍ່ສາມາດເຮັດໃຫ້ກາຍເປັນເຂົ້າສາລີໄດ້" ກໍເປັນຄຳເວົ້າທີ່ບໍ່ຕ້ອງສົງໄສເລີຍ. ທຸກຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງຈະຍັງຄົງຢູ່ໃນອານາຈັກ ແລະ ພຣະເຈົ້າຈະບໍ່ປະຕິບັດຢ່າງຜິດໆຕໍ່ໃຜກໍຕາມທີ່ຮັກພຣະອົງຢ່າງແທ້ຈິງ. ອີງຕາມໜ້າທີ່ ແລະ ຄຳພະຍານທີ່ແຕກຕ່າງຂອງພວກເຂົາ, ຜູ້ເອົາຊະນະທີ່ຢູ່ພາຍໃນອານາຈັກຈະຮັບໃຊ້ເປັນປະໂລຫິດ ຫຼື ຜູ້ຕິດຕາມ ແລະ ທຸກຄົນທີ່ໄດ້ຮັບໄຊຊະນະທ່າມກາງຄວາມລຳບາກຍາກແຄ້ນກໍຈະກາຍເປັນຄະນະປະໂລຫິດພາຍໃນອານາຈັກ. ຄະນະປະໂລຫິດຈະຖືກຈັດຕັ້ງຂຶ້ນເມື່ອພາລະກິດແຫ່ງຂ່າວປະເສີດທົ່ວທັງຈັກກະວານໄດ້ມາເຖິງເວລາສຸດທ້າຍ. ເມື່ອເວລານັ້ນມາເຖິງ, ສິ່ງທີ່ມະນຸດຄວນເຮັດກໍຈະເປັນການ

ປະຕິບັດໜ້າທີ່ຂອງເຂົາພາຍໃນອານາຈັກຂອງພຣະເຈົ້າ ແລະ ການທີ່ເຂົາດຳລົງຊີວິດຢູ່ຮ່ວມກັບພຣະເຈົ້າພາຍໃນອານາຈັກ. ໃນຄະນະປະໂລຫິດ ຈະມີປະໂລຫິດຕົ້ນໃຫຍ່ ແລະ ປະໂລຫິດ ແລະ ຄົນທີ່ເຫຼືອຈະເປັນບຸດຊາຍ ແລະ ປະຊາຊົນຂອງພຣະເຈົ້າ. ສິ່ງນີ້ແມ່ນໄດ້ຖືກກຳນົດໂດຍຄຳພະຍານທີ່ພວກເຂົາມີຕໍ່ພຣະເຈົ້າໃນລະຫວ່າງຄວາມລຳບາກຍາກແຄ້ນ; ພວກມັນບໍ່ແມ່ນຕຳແໜ່ງທີ່ມອບໃຫ້ຕາມອຳເພີໃຈ. ຫຼັງຈາກທີ່ສະຖານະຂອງມະນຸດຖືກແຕ່ງຕັ້ງແລ້ວ, ພາລະກິດຂອງພຣະເຈົ້າກໍຈະສິ້ນສຸດຍ້ອນແຕ່ລະຄົນຖືກຈັດແບ່ງຕາມປະເພດຂອງໃຜລາວ ແລະ ກັບຄືນສູ່ທີ່ເດີມຂອງພວກເຂົາ ແລະ ນີ້ຄືເຄື່ອງໝາຍທີ່ບົ່ງບອກຄວາມສຳເລັດຂອງພາລະກິດຂອງພຣະເຈົ້າ, ນີ້ແມ່ນຜົນສຸດທ້າຍຂອງພາລະກິດຂອງພຣະເຈົ້າ ແລະ ເປັນແກ້ວຜະລຶກຂອງນິມິດແຫ່ງພາລະກິດຂອງພຣະເຈົ້າ ແລະ ການຮ່ວມມືຂອງມະນຸດ. ໃນທີ່ສຸດ, ມະນຸດກໍຈະໄດ້ພົບບ່ອນພັກເຊົາໃນອານາຈັກຂອງພຣະເຈົ້າ ແລະ ພຣະເຈົ້າກໍຈະກັບຄືນສູ່ບ່ອນຢູ່ອາໄສຂອງພຣະອົງເພື່ອພັກເຊົາເຊັ່ນກັນ. ນີ້ຄືຜົນສຸດທ້າຍຂອງການຮ່ວມມືເປັນເວລາ 6.000 ປີລະຫວ່າງພຣະເຈົ້າ ແລະ ມະນຸດ.

# ແກ່ນແທ້ຂອງພຣະຄຣິດຄືການເຊື່ອຟັງ ຄວາມປະສົງຂອງພຣະບິດາໃນສະຫວັນ

ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນຖືກເອີ້ນວ່າ ພຣະຄຣິດ ແລະ ພຣະຄຣິດເປັນມະນຸດທີ່ຖືກສະຖິດໂດຍພຣະວິນຍານຂອງພຣະເຈົ້າ. ມະນຸດທີ່ກ່າວເຖິງບໍ່ຄືກັບມະນຸດທົ່ວໄປທີ່ເກີດຈາກເນື້ອໜັງ. ຄວາມແຕກຕ່າງກໍຍ້ອນພຣະຄຣິດບໍ່ໄດ້ເກີດຈາກເນື້ອໜັງ ແລະ ເລືອດເນື້ອ; ພຣະອົງເປັນການບັງເກີດເປັນມະນຸດຂອງພຣະວິນຍານ. ພຣະອົງມີທັງຄວາມເປັນມະນຸດທີ່ທຳມະດາ ແລະ ຄວາມເປັນພຣະເຈົ້າທີ່ສົມບູນ. ຄວາມເປັນພຣະເຈົ້າຂອງພຣະອົງບໍ່ໄດ້ຖືກຄອບງຳໂດຍມະນຸດຄົນໃດ. ຄວາມເປັນມະນຸດທີ່ທຳມະດາຂອງພຣະອົງປະຄັບປະຄອງກິດຈະກຳທີ່ທຳມະດາທັງໝົດຂອງພຣະອົງທີ່ເກີດຂຶ້ນທາງເນື້ອໜັງໃນຂະນະທີ່ຄວາມເປັນພຣະເຈົ້າຂອງພຣະອົງໄດ້ປະຕິບັດພາລະກິດຂອງພຣະເຈົ້າດ້ວຍຕົວພຣະອົງເອງ. ບໍ່ວ່າຄວາມເປັນມະນຸດ ຫຼື ຄວາມເປັນພຣະເຈົ້າຂອງພຣະອົງ ທັງສອງກໍຍອມອ່ອນນ້ອມຕໍ່ຄວາມປະສົງຂອງພຣະບິດາໃນສະຫວັນ. ແກ່ນແທ້ຂອງພຣະຄຣິດແມ່ນພຣະວິນຍານ ນັ້ນກໍຄື ຄວາມເປັນພຣະເຈົ້າ. ດ້ວຍເຫດນັ້ນ ແກ່ນແທ້ຂອງພຣະອົງແມ່ນເກີດຈາກຕົວພຣະອົງເອງ; ແກ່ນແທ້ນີ້ຈະບໍ່ຂັດຂວາງພາລະກິດຂອງພຣະອົງເອງ ແລະ ເປັນໄປບໍ່ໄດ້ທີ່ພຣະອົງຈະສາມາດເຮັດໃນສິ່ງໃດກໍຕາມທີ່ທຳລາຍພາລະກິດຂອງພຣະອົງເອງ ຫຼື ພຣະອົງເຄີຍກ່າວພຣະທຳໃດໆທີ່ຕໍ່ຕ້ານຄວາມປະສົງຂອງພຣະອົງເອງ. ເພາະສະນັ້ນພຣະເຈົ້າທີ່ບັງເກີດເປັນມະນຸດຈະບໍ່ປະຕິບັດພາລະກິດໃດກໍຕາມທີ່ຂັດຂວາງການຄຸ້ມຄອງຂອງພຣະອົງເອງຢ່າງແນ່ນອນ. ນີ້ຄືສິ່ງທີ່ຜູ້ຄົນຄວນເຂົ້າໃຈ. ແກ່ນແທ້ຂອງພາລະກິດຂອງພຣະວິນຍານບໍລິສຸດກໍຄືການຊ່ວຍມະນຸດໃຫ້ລອດພົ້ນ ແລະ ເພື່ອຜົນປະໂຫຍດແຫ່ງການຄຸ້ມຄອງຂອງພຣະເຈົ້າເອງ. ໃນທຳນອງດຽວກັນ ພາລະກິດຂອງພຣະຄຣິດກໍຄືການຊ່ວຍມະນຸດໃຫ້ລອດພົ້ນ ແລະ ເພື່ອຜົນປະໂຫຍດແຫ່ງຄວາມປະສົງຂອງພຣະເຈົ້າອີກດ້ວຍ. ດ້ວຍວ່າ ພຣະເຈົ້າມາບັງເກີດເປັນມະນຸດ ພຣະອົງເຂົ້າໃຈເຖິງແກ່ນແທ້ຂອງພຣະອົງທີ່ຢູ່ພາຍໃຕ້ເນື້ອໜັງຂອງພຣະອົງ ຈົນເຖິງຂັ້ນທີ່ວ່າເນື້ອໜັງຂອງພຣະອົງພຽງພໍທີ່ຈະຮັບພາລະກິດຂອງພຣະອົງໄດ້. ດ້ວຍເຫດນັ້ນ ພາລະກິດທັງໝົດຂອງພຣະວິນຍານຂອງພຣະເຈົ້າຈຶ່ງຖືກແທນໂດຍພາລະກິດຂອງພຣະຄຣິດໃນລະຫວ່າງເວລາແຫ່ງການບັງເກີດເປັນມະນຸດ ແລະ ພາລະກິດຂອງພຣະຄຣິດແມ່ນຈຸດໃຈກາງທີ່ສຳຄັນຂອງພາລະກິດທັງໝົດໃນຕະຫຼອດເວລາແຫ່ງການບັງເກີດເປັນມະນຸດ. ພາລະກິດຂອງພຣະຄຣິດບໍ່ສາມາດປະສົມກັນກັບພາລະກິດຈາກຍຸກອື່ນໆ. ຍ້ອນພຣະເຈົ້າມາບັງເກີດເປັນມະນຸດ ພຣະອົງຈຶ່ງປະຕິບັດພາລະກິດໃນຕົວຕົນທີ່ເປັນເນື້ອໜັງຂອງພຣະອົງ; ຍ້ອນພຣະອົງມາບັງເກີດເປັນມະນຸດ ແລ້ວພຣະອົງກໍສຳເລັດພາລະກິດທີ່ພຣະອົງຄວນປະຕິບັດໂດຍຜ່ານເນື້ອໜັງ. ບໍ່ວ່າພຣະວິນຍານຂອງພຣະເຈົ້າ ຫຼື ພຣະຄຣິດ ທັງສອງກໍເປັນພຣະເຈົ້າເອງ ແລະ ພຣະອົງກະທຳພາລະກິດທີ່ພຣະອົງຄວນກະທຳ ແລະ ປະຕິບັດພັນທະກິດທີ່ພຣະອົງຄວນປະຕິບັດ.

ແກ່ນແທ້ຂອງພຣະເຈົ້າເອງແມ່ນມີສິດອຳນາດ ແຕ່ພຣະອົງສາມາດຍອມຢູ່ພາຍໃຕ້ສິດອຳນາດທີ່ມາຈາກພຣະອົງຢ່າງສົມບູນ. ບໍ່ວ່າພາລະກິດຂອງພຣະວິນຍານ ຫຼື ພາລະກິດແຫ່ງເນື້ອໜັງ ທັງສອງບໍ່

ໄດ້ຂັດແຍ້ງຕໍ່ກັນແລະກັນ. ພຣະວິນຍານຂອງພຣະເຈົ້າມີສິດອຳນາດເໜືອການຊົງສ້າງທັງໝົດ. ເນື້ອໜັງທີ່ເປັນແກ່ນແທ້ຂອງພຣະເຈົ້າກໍປະກອບດ້ວຍສິດອຳນາດເຊັ່ນດຽວກັນ ແຕ່ພຣະເຈົ້າໃນເນື້ອໜັງສາມາດປະຕິບັດພາລະກິດທັງໝົດທີ່ເຊື່ອຟັງຄວາມປະສົງຂອງພຣະບິດາໃນສະຫວັນ. ບໍ່ມີຄົນໃດສາມາດບັນລຸ ຫຼື ຄາດຄິດເຖິງສິ່ງນີ້ໄດ້. ພຣະເຈົ້າເອງມີສິດອຳນາດ ສ່ວນເນື້ອໜັງຂອງພຣະອົງແມ່ນຢູ່ພາຍໃຕ້ສິດອຳນາດຂອງພຣະອົງ. ນີ້ຄືຄວາມໝາຍເມື່ອມັນຖືກກ່າວວ່າ "ພຣະຄຣິດເຊື່ອຟັງຄວາມປະສົງຂອງພຣະເຈົ້າພຣະບິດາ". ພຣະເຈົ້າເປັນພຣະວິນຍານ ແລະ ສາມາດປະຕິບັດພາລະກິດແຫ່ງຄວາມລອດພົ້ນໄດ້ ຍ້ອນພຣະເຈົ້າມາບັງເກີດເປັນມະນຸດ. ຢ່າງໃດກໍຕາມ ພຣະເຈົ້າປະຕິບັດພາລະກິດຂອງພຣະອົງເອງດ້ວຍພຣະອົງເອງ; ພຣະອົງບໍ່ໄດ້ຂັດຂວາງ ຫຼື ແຊກແຊງ ແຮງໄກທີ່ພຣະອົງຈະປະຕິບັດພາລະກິດທີ່ຂັດແຍ້ງກັບຕົວມັນເອງ ນັ້ນກໍຍ້ອນວ່າ ແກ່ນແທ້ຂອງພາລະກິດທີ່ປະຕິບັດໂດຍພຣະວິນຍານ ແລະ ເນື້ອໜັງນັ້ນແມ່ນແບບດຽວກັນ. ບໍ່ວ່າພຣະວິນຍານ ຫຼື ເນື້ອໜັງ ທັງສອງປະຕິບັດພາລະກິດເພື່ອບັນລຸຕາມຄວາມປະສົງດຽວກັນ ແລະ ເພື່ອຄຸ້ມຄອງພາລະກິດດຽວກັນ. ເຖິງແມ່ນວ່າພຣະວິນຍານ ແລະ ເນື້ອໜັງມີຄຸນສົມບັດທີ່ແຕກຕ່າງກັນ ແຕ່ແກ່ນແທ້ຂອງພວກເພິ່ນແມ່ນຄືກັນ; ທັງສອງມີແກ່ນແທ້ຂອງພຣະເຈົ້າ ແລະ ເປັນຕົວຕົນຂອງພຣະເຈົ້າເອງ. ພຣະເຈົ້າເອງບໍ່ມີອົງປະກອບແຫ່ງຄວາມບໍ່ເຊື່ອຟັງ; ແກ່ນແທ້ຂອງພຣະອົງແມ່ນດີ. ພຣະອົງແມ່ນການສະແດງໃຫ້ເຫັນເຖິງຄວາມສວຍງາມ ແລະ ຄວາມດີທຸກຢ່າງ ພ້ອມທັງຄວາມຮັກທັງໝົດ. ແມ່ນແຕ່ໃນເນື້ອໜັງ ພຣະເຈົ້າກໍບໍ່ເຮັດສິ່ງໃດທີ່ບໍ່ເຊື່ອຟັງພຣະເຈົ້າພຣະບິດາ. ເຖິງແມ່ນຕ້ອງເສຍສະລະຊີວິດຂອງພຣະອົງ ພຣະອົງກໍເຕັມໃຈທີ່ຈະເຮັດເຊັ່ນນັ້ນ ແລະ ພຣະອົງຈະບໍ່ຕັດສິນໃຈແບບອື່ນ. ພຣະເຈົ້າບໍ່ມີອົງປະກອບແຫ່ງຄວາມຄິດວ່າຕົນເອງຖືກຕ້ອງ ຫຼື ການເຫັນວ່າຕົນເອງສຳຄັນ ຫຼື ການຫຼອກລວງ ແລະ ຄວາມອວດດີ; ພຣະອົງບໍ່ມີອົງປະກອບແຫ່ງຄວາມບໍ່ຊື່ສັດ. ທຸກສິ່ງທີ່ບໍ່ເຊື່ອຟັງພຣະເຈົ້າມາຈາກຊາຕານ; ຊາຕານເປັນຕົ້ນເຫດແຫ່ງຄວາມໜ້າລັງກຽດ ແລະ ຄວາມຊົ່ວຮ້າຍທັງໝົດ. ເຫດຜົນທີ່ມະນຸດມີຄຸນສົມບັດຄ້າຍຄືກັບຂອງຊາຕານກໍຍ້ອນມະນຸດໄດ້ຖືກເຮັດໃຫ້ເສື່ອມຊາມ ແລະ ຈັດການໂດຍຊາຕານ. ພຣະຄຣິດບໍ່ໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ ດ້ວຍເຫດນີ້ ພຣະອົງຈຶ່ງມີພຽງແຕ່ລັກສະນະຂອງພຣະເຈົ້າເທົ່ານັ້ນ ແລະ ບໍ່ມີລັກສະນະຂອງຊາຕານ. ບໍ່ວ່າພາລະກິດຈະຍາກພຽງໃດ ຫຼື ເນື້ອໜັງຈະອ່ອນແອພຽງໃດ, ໃນຂະນະທີ່ພຣະອົງດຳລົງຊີວິດໂດຍເນື້ອໜັງ ພຣະເຈົ້າຈະບໍ່ເຮັດສິ່ງໃດທີ່ຂັດຂວາງພາລະກິດຂອງພຣະເຈົ້າເອງ ແຮງໄກທີ່ຈະປະຖິ້ມຄວາມປະສົງຂອງພຣະເຈົ້າພຣະບິດາດ້ວຍຄວາມບໍ່ເຊື່ອຟັງເລີຍ. ພຣະອົງນັ້ນຍອມທົນທຸກຕໍ່ຄວາມເຈັບປວດທາງເນື້ອໜັງດີກວ່າຈະຝ່າຝືນຄວາມປະສົງຂອງພຣະເຈົ້າພຣະບິດາ; ຄືກັບພຣະເຢຊູໄດ້ກ່າວໄວ້ໃນຄຳອະທິຖານວ່າ "ໂອບິດາເອີຍ, ຖ້າເປັນໄດ້ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ ບໍ່ແມ່ນເປັນຕາມທີ່ຂ້ານ້ອຍປະສົງ, ແຕ່ຕາມຄວາມປະສົງຂອງພຣະອົງ". ຜູ້ຄົນສ້າງທາງເລືອກຂອງຕົນເອງ ແຕ່ພຣະຄຣິດບໍ່ແມ່ນແບບນັ້ນ. ເຖິງພຣະອົງມີຕົວຕົນຂອງພຣະເຈົ້າເອງ ພຣະອົງຍັງສະແຫວງຫາຄວາມປະສົງຂອງພຣະເຈົ້າພຣະບິດາ ແລະ ໄດ້ປະຕິບັດຕາມສິ່ງທີ່ພຣະເຈົ້າພຣະບິດາມອບໝາຍໃຫ້ກັບພຣະອົງຈາກມຸມມອງຂອງມະນຸດ. ນີ້ຄືສິ່ງທີ່ມະນຸດບໍ່ສາມາດເຮັດໄດ້. ສິ່ງທີ່ມາຈາກ

ຊາຕານບໍ່ສາມາດມີແກ່ນແທ້ຂອງພຣະເຈົ້າໄດ້ ມັນສາມາດມີໄດ້ພຽງແຕ່ສິ່ງທີ່ບໍ່ເຊື່ອຟັງ ແລະ ຕໍ່ຕ້ານພຣະເຈົ້າ. ສິ່ງນັ້ນບໍ່ສາມາດເຊື່ອຟັງພຣະເຈົ້າຢ່າງເຕັມປຽມ ແຮງໄກທີ່ຈະເຕັມໃຈເຊື່ອງຟັງຄວາມປະສົງຂອງພຣະເຈົ້າຢ່າງເຕັມໃຈ. ມະນຸດທຸກຄົນນອກຈາກພຣະຄຣິດອາດເຮັດສິ່ງທີ່ຕໍ່ຕ້ານພຣະເຈົ້າ ແລະ ບໍ່ມີມະນຸດຄົນໃດສາມາດຮັບພາລະກິດທີ່ພຣະເຈົ້າມອບໝາຍໃຫ້ໂດຍກົງໄດ້; ບໍ່ມີໃຜສາມາດເຫັນການຄຸ້ມຄອງຂອງພຣະເຈົ້າວ່າເປັນໜ້າທີ່ຂອງພວກເຂົາເອງທີ່ຕ້ອງປະຕິບັດ. ແກ່ນແທ້ຂອງພຣະຄຣິດແມ່ນການຍອມຢູ່ພາຍໃຕ້ຄວາມປະສົງຂອງພຣະເຈົ້າພຣະບິດາ; ການບໍ່ເຊື່ອຟັງພຣະເຈົ້າແມ່ນລັກສະນະຂອງຊາຕານ. ຄຸນສົມບັດສອງຢ່າງນີ້ບໍ່ສາມາດເຂົ້າກັນໄດ້ ແລະ ຄົນໃດທີ່ມີຄຸນສົມບັດຂອງຊາຕານບໍ່ສາມາດຖືກເອີ້ນວ່າ ພຣະຄຣິດ. ເຫດຜົນທີ່ມະນຸດບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າແທນພຣະອົງໄດ້ກໍຍ້ອນວ່າ ມະນຸດບໍ່ມີແກ່ນແທ້ຂອງພຣະເຈົ້າເລີຍ. ມະນຸດປະຕິບັດພາລະກິດເພື່ອພຣະເຈົ້າໂດຍເຫັນແກ່ຜົນປະໂຫຍດສ່ວນຕົວຂອງມະນຸດ ແລະ ຄວາມຫວັງໃນອະນາຄົດ ແຕ່ພຣະຄຣິດປະຕິບັດພາລະກິດເພື່ອເຮັດຕາມຄວາມປະສົງຂອງພຣະເຈົ້າພຣະບິດາ.

ຄວາມເປັນມະນຸດຂອງພຣະຄຣິດແມ່ນຖືກຄວບຄຸມໂດຍຄວາມເປັນພຣະເຈົ້າຂອງພຣະອົງ. ເຖິງແມ່ນພຣະອົງຢູ່ໃນເນື້ອໜັງ ຄວາມເປັນມະນຸດຂອງພຣະອົງກໍບໍ່ຄືກັນກັບມະນຸດທີ່ເກີດຈາກເນື້ອໜັງໂດຍສິ້ນເຊີງ. ພຣະອົງມີລັກສະນະພິເສດຂອງພຣະອົງເອງ ແລະ ລັກສະນະນີ້ກໍຖືກຄວບຄຸມໂດຍຄວາມເປັນພຣະເຈົ້າຂອງພຣະອົງເຊັ່ນດຽວກັນ. ຄວາມເປັນພຣະເຈົ້າຂອງພຣະອົງບໍ່ມີຈຸດອ່ອນ; ຈຸດອ່ອນຂອງພຣະຄຣິດໝາຍເຖິງສິ່ງທີ່ເກີດຈາກຄວາມເປັນມະນຸດຂອງພຣະອົງ. ຈຸດອ່ອນນີ້ຈຳກັດຄວາມເປັນພຣະເຈົ້າຂອງພຣະອົງໃນລະດັບໃດໜຶ່ງ ແຕ່ຂໍ້ຈຳກັດດັ່ງກ່າວແມ່ນຢູ່ພາຍໃຕ້ຂອບເຂດ ແລະເວລາ ແລະ ຢູ່ໃນຂອບເຂດ. ເມື່ອເຖິງເວລາປະຕິບັດພາລະກິດຂອງຄວາມເປັນພຣະເຈົ້າຂອງພຣະອົງພຣະອົງກໍປະຕິບັດໂດຍບໍ່ໃສ່ໃຈຄວາມເປັນມະນຸດຂອງພຣະອົງ. ຄວາມເປັນມະນຸດຂອງພຣະຄຣິດແມ່ນຖືກຄວບຄຸມໂດຍຄວາມເປັນພຣະເຈົ້າຂອງພຣະອົງຢ່າງສິ້ນເຊີງ. ນອກຈາກຊີວິດທີ່ທຳມະດາຂອງຄວາມເປັນມະນຸດຂອງພຣະອົງ ທຸກການກະທຳອື່ນໆຂອງຄວາມເປັນມະນຸດຂອງພຣະອົງແມ່ນໄດ້ຮັບອິດທິພົນ, ໄດ້ຮັບຜົນກະທົບ ແລະ ໄດ້ຮັບການຄວບຄຸມໂດຍຄວາມເປັນພຣະເຈົ້າຂອງພຣະອົງ. ເຖິງແມ່ນພຣະຄຣິດມີຄວາມເປັນມະນຸດ ສິ່ງນັ້ນກໍບໍ່ໄດ້ສ້າງຄວາມຫຍຸ້ງຍາກໃຫ້ກັບພາລະກິດຂອງຄວາມເປັນພຣະເຈົ້າຂອງພຣະອົງເລີຍ ແລະ ນີ້ກໍຍ້ອນວ່າຄວາມເປັນມະນຸດຂອງພຣະຄຣິດຖືກຊີ້ນຳໂດຍຄວາມເປັນພຣະເຈົ້າຂອງພຣະອົງຢ່າງແນ່ນອນ; ເຖິງແມ່ນຄວາມເປັນມະນຸດຂອງພຣະອົງບໍ່ໄດ້ບັນລຸວຸດທິພາວະໃນການທີ່ມັນປະພຶດຕົນກັບຄົນອື່ນ ສິ່ງນັ້ນກໍບໍ່ໄດ້ກະທົບພາລະກິດທຳມະດາຂອງຄວາມເປັນພຣະເຈົ້າຂອງພຣະອົງ. ເມື່ອເຮົາກ່າວວ່າ ຄວາມເປັນມະນຸດຂອງພຣະອົງບໍ່ໄດ້ຖືກເຮັດໃຫ້ເສື່ອມຊາມ ເຮົາໝາຍຄວາມວ່າ ຄວາມເປັນມະນຸດຂອງພຣະຄຣິດສາມາດຖືກສັ່ງໂດຍຄວາມເປັນພຣະເຈົ້າຂອງພຣະອົງໂດຍກົງ ແລະ ພຣະອົງມີຄວາມສຳນຶກທີ່ສູງກວ່າມະນຸດທຳມະດາ. ຄວາມເປັນມະນຸດຂອງພຣະອົງເໝາະສົມທີ່ສຸດທີ່ຈະຮັບການຄວບຄຸມໂດຍຄວາມເປັນພຣະເຈົ້າໃນພາລະກິດຂອງພຣະອົງ; ຄວາມເປັນມະນຸດຂອງພຣະອົງແມ່ນມີຄວາມສາມາດທີ່ສຸດໃນການສະແດງພາລະກິດແຫ່ງ

ຄວາມເປັນພຣະເຈົ້າ ແລະ ມີຄວາມສາມາດສຸດທີ່ຈະຍອມຢູ່ພາຍໃຕ້ພາລະກິດດັ່ງກ່າວ. ເມື່ອພຣະເຈົ້າປະຕິບັດພາລະກິດໃນເນື້ອໜັງ ພຣະອົງບໍ່ເບິ່ງຂ້າມໜ້າທີ່ທີ່ມະນຸດໃນເນື້ອໜັງຄວນປະຕິບັດຕາມ; ພຣະອົງສາມາດນະມັດສະການພຣະເຈົ້າໃນສະຫວັນດ້ວຍຫົວໃຈທີ່ແທ້ຈິງ. ພຣະອົງມີແກ່ນແທ້ຂອງພຣະເຈົ້າ ແລະ ຕົວຕົນຂອງພຣະອົງກໍມາຈາກພຣະເຈົ້າເອງ. ພຽງແຕ່ພຣະອົງລົງມາເທິງແຜ່ນດິນໂລກ ແລະ ກາຍມາເປັນສິ່ງມີຊີວິດທີ່ຖືກສ້າງ ໂດຍຢູ່ໃນຮ່າງກາຍຂອງສິ່ງມີຊີວິດທີ່ຖືກສ້າງ ແລະ ປະກອບມີຄວາມເປັນມະນຸດທີ່ພຣະອົງບໍ່ເຄີຍມີມາກ່ອນ; ພຣະອົງຈຶ່ງສາມາດນະມັດສະການພຣະເຈົ້າໃນສະຫວັນໄດ້; ນີ້ຄືການເປັນຢູ່ຂອງພຣະເຈົ້າເອງ ແລະ ມະນຸດບໍ່ສາມາດຮຽນແບບໄດ້. ຕົວຕົນຂອງພຣະອົງແມ່ນພຣະເຈົ້າເອງ. ພຣະອົງນະມັດສະການພຣະເຈົ້າຈາກມຸມມອງຂອງມະນຸດ; ດ້ວຍເຫດນັ້ນ ພຣະທຳທີ່ວ່າ "ພຣະຄຣິດນະມັດສະການພຣະເຈົ້າໃນສະຫວັນ" ກໍບໍ່ແມ່ນສິ່ງທີ່ຜິດເລີຍ. ສິ່ງທີ່ພຣະອົງຮຽກຮ້ອງຈາກມະນຸດກໍຄືການເປັນຢູ່ຂອງພຣະອົງນັ້ນເອງ; ພຣະອົງໄດ້ຮັບທຸກຢ່າງທີ່ພຣະອົງຮຽກຮ້ອງຈາກມະນຸດແລ້ວ ກ່ອນໜ້າທີ່ພຣະອົງຈະຮຽກຮ້ອງຈາກພວກເຂົາດ້ວຍຊໍ້າ. ພຣະອົງຈະບໍ່ຮຽກຮ້ອງຈາກຄົນອື່ນ ໃນຂະນະທີ່ພຣະອົງເອງຫຼຸດພົ້ນຈາກພວກເຂົາ ຍ້ອນສິ່ງທັງໝົດນີ້ປະກອບເປັນການເປັນຢູ່ຂອງພຣະອົງ. ບໍ່ວ່າພຣະອົງປະຕິບັດພາລະກິດຂອງພຣະອົງແນວໃດ ພຣະອົງຈະບໍ່ກະທຳໃນທ່າທາງທີ່ບໍ່ເຊື່ອຟັງພຣະເຈົ້າ. ບໍ່ວ່າພຣະອົງຮຽກຮ້ອງຫຍັງຈາກມະນຸດ ບໍ່ມີການຮຽກຮ້ອງໃດທີ່ເໜືອໄປກວ່າສິ່ງທີ່ມະນຸດເຮັດໄດ້. ທຸກສິ່ງທີ່ພຣະອົງກະທຳແມ່ນການປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ແລະ ເພື່ອເຫັນແກ່ຜົນປະໂຫຍດແຫ່ງການຄຸ້ມຄອງຂອງພຣະອົງ. ຄວາມເປັນພຣະເຈົ້າຂອງພຣະຄຣິດແມ່ນຢູ່ເໜືອມະນຸດທຸກຄົນ ດ້ວຍເຫດນີ້ ພຣະອົງຈຶ່ງມີສິດອຳນາດສູງສຸດເໜືອສິ່ງມີຊີວິດທີ່ຖືກສ້າງທັງໝົດ. ສິດອຳນາດນີ້ແມ່ນຄວາມເປັນພຣະເຈົ້າຂອງພຣະອົງ ນັ້ນກໍຄື ອຸປະນິໄສ ແລະ ການເປັນຢູ່ຂອງພຣະເຈົ້າເອງ ເຊິ່ງກຳນົດຕົວຕົນຂອງພຣະອົງ. ດ້ວຍເຫດນີ້ ບໍ່ວ່າຄວາມເປັນມະນຸດຂອງພຣະອົງຈະທຳມະດາພຽງໃດ ກໍບໍ່ສາມາດປະຕິເສດໄດ້ວ່າ ພຣະອົງມີຕົວຕົນຂອງພຣະເຈົ້າເອງ; ບໍ່ວ່າພຣະອົງກ່າວຈາກຈຸດຢືນໃດກໍຕາມ ແລະ ພຣະອົງເຊື່ອຟັງຄວາມປະສົງຂອງພຣະເຈົ້າແນວໃດກໍຕາມ ບໍ່ສາມາດເວົ້າໄດ້ວ່າ ພຣະອົງບໍ່ແມ່ນພຣະເຈົ້າ. ມະນຸດທີ່ໂງ່ຈ້າ ແລະ ບໍ່ມີຄວາມຮູ້ມັກເຫັນຄວາມເປັນມະນຸດທີ່ທຳມະດາຂອງພຣະຄຣິດເປັນຂໍ້ບົກຜ່ອງ. ບໍ່ວ່າພຣະອົງສະແດງ ແລະ ເປີດເຜີຍການເປັນຢູ່ຂອງຄວາມເປັນພຣະເຈົ້າຂອງພຣະອົງແນວໃດກໍຕາມ ມະນຸດບໍ່ສາມາດຍອມຮັບວ່າ ພຣະອົງເປັນພຣະຄຣິດ. ຍິ່ງພຣະຄຣິດສະແດງເຖິງຄວາມເຊື່ອຟັງ ແລະ ຄວາມຖ່ອມຕົວຂອງພຣະອົງຫຼາຍພຽງໃດ, ມະນຸດທີ່ໂງ່ຈ້າກໍເຫັນພຣະຄຣິດແບບບໍ່ຈິງຈັງຫຼາຍພຽງນັ້ນ. ຍັງມີຄົນເຖິງກັບມີທັດສະນະຄະຕິກີດກັ້ນ ແລະ ດູຖູກພຣະອົງ ແຕ່ຈັດວາງ "ມະນຸດຍິ່ງໃຫຍ່" ທີ່ມີຮູບລັກສະນະເປັນຕານັບຖືໄວ້ເທິງໂຕະເພື່ອບູຊາ. ການຕໍ່ຕ້ານຂອງມະນຸດ ແລະ ການບໍ່ເຊື່ອຟັງຂອງພຣະເຈົ້າມາຈາກຄວາມຈິງທີ່ວ່າ ແກ່ນແທ້ຂອງພຣະເຈົ້າທີ່ບັງເກີດເປັນມະນຸດຍອມຢູ່ພາຍໃຕ້ຄວາມປະສົງຂອງພຣະເຈົ້າ ພ້ອມທັງຄວາມເປັນມະນຸດທີ່ທຳມະດາຂອງພຣະຄຣິດ; ເລື່ອງນີ້ຄືຕົ້ນເຫດໃນການຕໍ່ຕ້ານຂອງມະນຸດ ແລະ ຄວາມບໍ່ເຊື່ອຟັງພຣະເຈົ້າ. ຖ້າພຣະຄຣິດບໍ່ມີຮູບລັກສະນະໃນຄວາມເປັນມະນຸດຂອງພຣະອົງ ຫຼື ສະແຫວງຫາຄວາມປະສົງຂອງພຣະເຈົ້າພຣະບິດາຈາກມຸມມອງ

ຂອງສິ່ງມີຊີວິດທີ່ຖືກສ້າງ, ແຕ່ກົງກັນຂ້າມ ພຣະອົງປະກອບມີຄວາມເໜືອມະນຸດ, ແລ້ວອາດຈະບໍ່ມີຄວາມບໍ່ເຊື່ອຟັງໃນມະນຸດ. ເຫດຜົນທີ່ມະນຸດເຕັມໃຈເຊື່ອໃນພຣະເຈົ້າທີ່ບໍ່ສາມາດເຫັນໄດ້ຢູ່ສະເໝີເຊິ່ງຢູ່ໃນສະຫວັນກໍຍ້ອນພຣະເຈົ້າທີ່ຢູ່ໃນສະຫວັນບໍ່ມີຄວາມເປັນມະນຸດ ແລະ ພຣະອົງບໍ່ມີຄຸນສົມບັດແມ່ນແຕ່ຢ່າງດຽວຂອງສິ່ງມີຊີວິດທີ່ຖືກສ້າງ. ເພາະສະນັ້ນ ມະນຸດເຄົາລົບພຣະອົງດ້ວຍຄວາມນັບຖືຢ່າງຍິ່ງ ແຕ່ມີທັດສະນະຄະຕິດູຖູກຕໍ່ພຣະຄຣິດ.

ເຖິງແມ່ນພຣະຄຣິດທີ່ຢູ່ເທິງແຜ່ນດິນໂລກສາມາດປະຕິບັດພາລະກິດແທນພຣະເຈົ້າເອງໄດ້ ພຣະອົງບໍ່ໄດ້ມາດ້ວຍເຈດຕະນາສະແດງພາບລັກຂອງພຣະອົງຜ່ານເນື້ອໜັງໃຫ້ມະນຸດທຸກຄົນເຫັນ. ພຣະອົງບໍ່ໄດ້ມາເພື່ອໃຫ້ມະນຸດທຸກຄົນເຫັນພຣະອົງ; ພຣະອົງມາເພື່ອເຮັດໃຫ້ມະນຸດຖືກນຳພາໂດຍມືຂອງພຣະອົງ ແລະ ເພື່ອໃຫ້ມະນຸດເຂົ້າສູ່ຍຸກໃໝ່. ໜ້າທີ່ຂອງພຣະຄຣິດໃນເນື້ອໜັງກໍເພື່ອພາລະກິດຂອງພຣະເຈົ້າເອງ ນັ້ນກໍຄືເພື່ອພາລະກິດຂອງພຣະເຈົ້າທີ່ເປັນມະນຸດ ແລະ ບໍ່ແມ່ນເພື່ອເຮັດໃຫ້ມະນຸດເຂົ້າໃຈແກ່ນແທ້ແຫ່ງເນື້ອໜັງຂອງພຣະອົງຢ່າງສິ້ນເຊີງ. ບໍ່ວ່າພຣະອົງປະຕິບັດພາລະກິດແນວໃດ ບໍ່ມີຫຍັງທີ່ພຣະອົງເຮັດນອກເໜືອໄປກວ່າສິ່ງທີ່ມະນຸດສາມາດຮັບໄດ້. ບໍ່ວ່າພຣະອົງປະຕິບັດພາລະກິດແນວໃດ ພຣະອົງກໍປະຕິບັດຜ່ານເນື້ອໜັງພ້ອມກັບຄວາມເປັນມະນຸດທີ່ທຳມະດາ ແລະ ບໍ່ເປີດເຜີຍໃຫ້ມະນຸດເຫັນທັງໝົດເຖິງໃບໜ້າທີ່ແທ້ຈິງຂອງພຣະເຈົ້າ. ຍິ່ງໄປກວ່ານັ້ນ ພາລະກິດຂອງພຣະອົງບໍ່ເຄີຍຢູ່ເໜືອທຳມະຊາດ ຫຼື ລ້ຳຄ່າເກີນກວ່າທີ່ມະນຸດຈະຄາດຄິດໄດ້. ເຖິງແມ່ນວ່າ ພຣະຄຣິດເປັນຕົວແທນໃຫ້ກັບພຣະເຈົ້າເອງຜ່ານເນື້ອໜັງ ແລະ ດຳເນີນພາລະກິດທີ່ພຣະເຈົ້າເອງຄວນເຮັດດ້ວຍຕົວເອງ, ພຣະອົງບໍ່ປະຕິເສດການເປັນຢູ່ຂອງພຣະເຈົ້າທີ່ຢູ່ໃນສະຫວັນ ຫຼື ພຣະອົງບໍ່ໄດ້ປະກາດເຖິງການກະທຳຂອງພຣະອົງເອງຢ່າງຕື່ນເຕັ້ນ. ກົງກັນຂ້າມ ພຣະອົງຍັງຄົງລີ້ລັບພາຍໃຕ້ເນື້ອໜັງຂອງພຣະອົງຢ່າງຖ່ອມຕົວ. ນອກຈາກພຣະຄຣິດແລ້ວ ຄົນທີ່ອ້າງວ່າຕົນເອງເປັນພຣະຄຣິດແບບຜິດໆ ແມ່ນບໍ່ມີຄຸນສົມບັດຂອງພຣະອົງ. ເມື່ອທຽບໃສ່ກັບນິໄສທີ່ອວດດີ ແລະ ຍົກຍ້ອງຕົນເອງຂອງພຣະຄຣິດທີ່ຈອມປອມເຫຼົ່ານັ້ນ ກໍເຫັນໄດ້ຊັດເຈນວ່າ ເນື້ອໜັງປະເພດໃດທີ່ແມ່ນພຣະຄຣິດຢ່າງແທ້ຈິງ. ຍິ່ງພວກເຂົາຈອມປອມຫຼາຍພຽງໃດ ພຣະຄຣິດທີ່ຈອມປອມດັ່ງກ່າວກໍຍິ່ງອວດອ້າງຕົວຕົນຂອງພວກເຂົາອອກມາຫຼາຍພຽງນັ້ນ ແລະ ພວກເຂົາກໍຍິ່ງສາມາດເຮັດໝາຍສຳຄັນ ແລະ ການອັດສະຈັນເພື່ອຫຼອກລວງມະນຸດຫຼາຍພຽງນັ້ນ. ພຣະຄຣິດຈອມປອມບໍ່ມີຄຸນສົມບັດຂອງພຣະເຈົ້າ; ພຣະຄຣິດບໍ່ມີມົນທິນຈາກອົງປະກອບຕ່າງໆທີ່ເປັນຂອງພຣະຄຣິດຈອມປອມ. ພຣະເຈົ້າກາຍເປັນມະນຸດພຽງເຮັດສຳເລັດພາລະກິດແຫ່ງເນື້ອໜັງ ບໍ່ແມ່ນພຽງແຕ່ເພື່ອເຮັດໃຫ້ມະນຸດເຫັນພຣະອົງ. ກົງກັນຂ້າມ ພຣະອົງປ່ອຍໃຫ້ພາລະກິດຂອງພຣະອົງຢືນຢັນຕົວຕົນຂອງພຣະອົງ ແລະ ປ່ອຍໃຫ້ສິ່ງທີ່ພຣະອົງເປີດເຜີຍ ພິສູດເຖິງແກ່ນແທ້ຂອງພຣະອົງ. ແກ່ນແທ້ຂອງພຣະອົງໂດຍບໍ່ແມ່ນບໍ່ມີຫຼັກຖານ; ຕົວຕົນຂອງພຣະອົງບໍ່ໄດ້ຖືກຄວບຄຸມດ້ວຍມືຂອງພຣະອົງ; ຕົວຕົນຂອງພຣະອົງຖືກກຳນົດໂດຍພາລະກິດຂອງພຣະອົງ ແລະ ແກ່ນແທ້ຂອງພຣະອົງ. ເຖິງແມ່ນພຣະອົງມີແກ່ນແທ້ຂອງພຣະເຈົ້າເອງ ແລະ ສາມາດປະຕິບັດພາລະກິດຂອງພຣະເຈົ້າດ້ວຍຕົວພຣະອົງເອງ, ເຖິງຢ່າງໃດກໍຕາມ ພຣະອົງຍັງເປັນເນື້ອໜັງ ເຊິ່ງບໍ່ຄືກັບ

ພຣະວິນຍານ. ພຣະອົງບໍ່ແມ່ນພຣະເຈົ້າທີ່ມີຄຸນສົມບັດຂອງພຣະວິນຍານ; ພຣະອົງເປັນພຣະເຈົ້າທີ່ມີເປືອກນອກເປັນມະນຸດ. ສະນັ້ນ ບໍ່ວ່າພຣະອົງຈະທຳມະດາ ແລະ ອ່ອນແອຫຼາຍພຽງໃດ ແລະ ພຣະອົງສະແຫວງຫາຄວາມປະສົງຂອງພຣະເຈົ້າພຣະບິດາແນວໃດກໍຕາມ, ຄວາມເປັນພຣະເຈົ້າຂອງພຣະອົງກໍບໍ່ສາມາດປະຕິເສດໄດ້. ພາຍໃນພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ໄດ້ມີພຽງແຕ່ຄວາມເປັນມະນຸດທີ່ທຳມະດາ ແລະ ຈຸດອ່ອນຂອງມະນຸດ; ຍັງມີຄວາມອັດສະຈັນ ແລະ ຄວາມບໍ່ສາມາດຢັ່ງເຖິງຂອງຄວາມເປັນພຣະເຈົ້າຂອງພຣະອົງໄດ້ອີກດ້ວຍ ພ້ອມກັບການກະທຳທັງໝົດຜ່ານເນື້ອໜັງຂອງພຣະອົງອີກ. ດ້ວຍເຫດນັ້ນ ທັງຄວາມເປັນມະນຸດ ແລະ ຄວາມເປັນພຣະເຈົ້າແມ່ນມີຢູ່ໃນພຣະຄຣິດທັງໃນຄວາມເປັນຈິງ ແລະ ພາກປະຕິບັດ. ສິ່ງນີ້ບໍ່ແມ່ນສິ່ງທີ່ອ່າງເວົ້າ ຫຼື ເໜືອທຳມະຊາດແມ່ນແຕ່ໜ້ອຍເລີຍ. ພຣະອົງມາເທິງແຜ່ນດິນໂລກພ້ອມກັບຈຸດປະສົງຫຼັກໃນການປະຕິບັດພາລະກິດ; ມັນເປັນສິ່ງຈຳເປັນທີ່ຕ້ອງມີຄວາມເປັນມະນຸດທຳມະດາເພື່ອປະຕິບັດພາລະກິດເທິງແຜ່ນດິນໂລກ; ບໍ່ດັ່ງນັ້ນ ບໍ່ວ່າລິດອຳນາດຂອງຄວາມເປັນພຣະເຈົ້າຂອງພຣະອົງຈະຍິ່ງໃຫຍ່ພຽງໃດ ໜ້າທີ່ດັ້ງເດີມຂອງສິດອຳນາດນັ້ນກໍບໍ່ສາມາດນຳໄປປະຕິບັດໃຫ້ເກີດຜົນດີໄດ້. ເຖິງແມ່ນຄວາມເປັນມະນຸດຂອງພຣະອົງສຳຄັນຢ່າງຍິ່ງ ມັນກໍບໍ່ແມ່ນແກ່ນແທ້ຂອງພຣະອົງ. ແກ່ນແທ້ຂອງພຣະອົງແມ່ນຄວາມເປັນພຣະເຈົ້າ; ສະນັ້ນຊ່ວງເວລາທີ່ພຣະອົງເລີ່ມຕົ້ນປະຕິບັດພັນທະກິດຂອງພຣະອົງເທິງແຜ່ນດິນໂລກແມ່ນຊ່ວງເວລາທີ່ພຣະອົງເລີ່ມຕົ້ນສະແດງເຖິງຄວາມເປັນຢູ່ຂອງຄວາມເປັນພຣະເຈົ້າຂອງພຣະອົງ. ຄວາມເປັນມະນຸດຂອງພຣະອົງດຳລົງຢູ່ພຽງແຕ່ປະຄັບປະຄອງຊີວິດທຳມະດາຂອງເນື້ອໜັງຂອງພຣະອົງ ເພື່ອວ່າຄວາມເປັນພຣະເຈົ້າຂອງພຣະອົງຈະສາມາດປະຕິບັດພາລະກິດໄດ້ເປັນປົກກະຕິຜ່ານເນື້ອໜັງ; ແມ່ນຄວາມເປັນພຣະເຈົ້າທີ່ຊີ້ນຳພາລະກິດທັງໝົດ. ເມື່ອພຣະອົງເຮັດສຳເລັດພາລະກິດຂອງພຣະອົງ ພຣະອົງກໍໄດ້ບັນລຸພັນທະກິດຂອງພຣະອົງ. ສິ່ງທີ່ມະນຸດຄວນຮູ້ກໍຄືພາລະກິດທັງໝົດຂອງພຣະອົງ ແລະ ຍ້ອນພາລະກິດຂອງພຣະອົງທີ່ພຣະອົງເຮັດໃຫ້ມະນຸດຮູ້ຈັກພຣະອົງ. ໃນໄລຍະເວລາການປະຕິບັດພາລະກິດຂອງພຣະອົງ ພຣະອົງສະແດງເຖິງການເປັນຢູ່ຂອງຄວາມເປັນພຣະເຈົ້າຂອງພຣະອົງຫຼາຍພໍສົມຄວນເຊິ່ງບໍ່ແມ່ນອຸປະນິໄສທີ່ມີມົນທິນຈາກຄວາມເປັນມະນຸດ ຫຼື ມີມົນທິນຈາກຄວາມຄິດ ແລະ ການປະພຶດຂອງມະນຸດ. ເມື່ອມາເຖິງເວລາທີ່ພັນທະກິດທັງໝົດຂອງພຣະອົງມາເຖິງຈຸດສິ້ນສຸດລົງ, ພຣະອົງກໍໄດ້ສະແດງເຖິງອຸປະນິໄສທີ່ພຣະອົງຄວນສຳແດງຢ່າງສົມບູນ ແລະ ຄົບຖ້ວນແລ້ວ. ບໍ່ມີມະນຸດຄົນໃດແນະນຳພາລະກິດຂອງພຣະອົງ; ການສະແດງເຖິງອຸປະນິໄສຂອງພຣະອົງເປັນອິດສະຫຼະພໍສົມຄວນ ແລະ ບໍ່ຖືກຄວບຄຸມໂດຍຈິດໃຈ ຫຼື ດຳເນີນການໂດຍຄວາມຄິດ ແຕ່ຖືກເປີດເຜີຍຢ່າງເປັນທຳມະຊາດ. ບໍ່ມີມະນຸດຄົນໃດສາມາດເຮັດສິ່ງນີ້ໄດ້. ເຖິງແມ່ນສະພາບແວດລ້ອມລຳບາກພຽງໃດ ຫຼື ເງື່ອນໄຂບໍ່ເອື້ອອຳນວຍ ພຣະອົງກໍສາມາດສະແດງອຸປະນິໄສຂອງພຣະອົງໄດ້ໃນເວລາທີ່ເໝາະສົມ. ຄົນທີ່ເປັນພຣະຄຣິດສະແດງເຖິງການເປັນຢູ່ຂອງພຣະຄຣິດ ໃນຂະນະທີ່ຄົນບໍ່ໄດ້ເປັນພຣະຄຣິດ ບໍ່ມີອຸປະນິໄສຂອງພຣະຄຣິດ. ດ້ວຍເຫດນັ້ນ ເຖິງທຸກຄົນຕໍ່ຕ້ານພຣະອົງ ຫຼື ມີຄວາມເຊື່ອກ່ຽວກັບພຣະອົງ ບໍ່ມີໃຜສາມາດປະຕິເສດໂດຍອີງຕາມພື້ນຖານແຫ່ງຄວາມເຊື່ອຂອງມະນຸດໄດ້ວ່າ ອຸປະນິໄສທີ່ພຣະຄຣິດສະແດງ

ອອກແມ່ນມາຈາກພຣະເຈົ້າ. ທຸກຄົນທີ່ສະແຫວງຫາພຣະຄຣິດດ້ວຍຫົວໃຈທີ່ແທ້ຈິງ ຫຼື ສະແຫວງຫາພຣະເຈົ້າດ້ວຍຄວາມຕັ້ງໃຈຈະຍອມຮັບວ່າ ພຣະອົງເປັນພຣະຄຣິດໂດຍອີງຕາມການສະແດງອອກຂອງຄວາມເປັນພຣະເຈົ້າຂອງພຣະອົງ. ພວກເຂົາຈະບໍ່ປະຕິເສດພຣະຄຣິດ ໂດຍອີງຕາມພື້ນຖານແຫ່ງລັກສະນະໃດໜຶ່ງຂອງພຣະອົງທີ່ບໍ່ສອດຄ່ອງກັບຄວາມເຊື່ອຂອງມະນຸດ. ເຖິງແມ່ນມະນຸດໂງ່ຈ້າຫຼາຍທຸກຄົນຮູ້ຈັກຢ່າງຊັດເຈນວ່າ ແມ່ນຫຍັງຄືຄວາມປາຖະໜາຂອງມະນຸດ ແລະ ແມ່ນຫຍັງທີ່ເກີດມາຈາກພຣະເຈົ້າ. ພຽງແຕ່ຫຼາຍຄົນຈິງໃຈຕໍ່ຕ້ານພຣະຄຣິດອັນເປັນຜົນຈາກຄວາມຕັ້ງໃຈຂອງພວກເຂົາເອງເທົ່ານັ້ນ. ຖ້າບໍ່ແມ່ນຍ້ອນສິ່ງນີ້ ແລ້ວບໍ່ມີມະນຸດແມ່ນແຕ່ຄົນດຽວທີ່ຈະມີເຫດຜົນປະຕິເສດການດຳລົງຢູ່ຂອງພຣະຄຣິດ ຍ້ອນວ່າ ຄວາມເປັນພຣະເຈົ້າທີ່ສະແດງອອກໂດຍພຣະຄຣິດແມ່ນມີຢູ່ຈິງຢ່າງແນ່ນອນ ແລະ ພາລະກິດຂອງພຣະອົງກໍສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າຂອງທຸກຄົນ.

ພາລະກິດ ແລະ ການສະແດງຂອງພຣະຄຣິດກຳນົດແກ່ນແທ້ຂອງພຣະອົງ. ພຣະອົງສາມາດເຮັດໃຫ້ສຳເລັດດ້ວຍຫົວໃຈຢ່າງແທ້ຈິງທີ່ຖືກມອບໝາຍໃຫ້ກັບພຣະອົງ. ພຣະອົງສາມາດນະມັດສະການພຣະເຈົ້າທີ່ຢູ່ສະຫວັນດ້ວຍຫົວໃຈທີ່ແທ້ຈິງ ແລະ ສະແຫວງຫາຄວາມປະສົງຂອງພຣະເຈົ້າພຣະບິດາດ້ວຍຫົວໃຈທີ່ແທ້ຈິງ. ທຸກສິ່ງນີ້ແມ່ນຖືກກຳນົດໂດຍແກ່ນແທ້ຂອງພຣະອົງ. ດ້ວຍເຫດນັ້ນ ການເປີດເຜີຍຢ່າງທຳມະຊາດຂອງພຣະອົງກໍຖືກກຳນົດໂດຍແກ່ນແທ້ຂອງພຣະອົງ; ເຫດຜົນທີ່ເຮົາເອີ້ນສິ່ງນີ້ວ່າເປັນ "ການເປີດເຜີຍຢ່າງທຳມະຊາດ" ຂອງພຣະອົງ ກໍຍ້ອນວ່າ ການສະແດງຂອງພຣະອົງບໍ່ແມ່ນການຮຽນແບບ ຫຼື ຜົນຈາກການສຶກສາຂອງມະນຸດ ຫຼື ຜົນຈາກການປູກຝັງເປັນເວລາຫຼາຍປີຂອງມະນຸດ. ພຣະອົງບໍ່ໄດ້ຮຽນຮູ້ ຫຼື ປະດັບປະດາພຣະອົງເອງດ້ວຍສິ່ງນັ້ນ; ກົງກັນຂ້າມ ມັນເປັນທຳມະຊາດຂອງພຣະອົງ. ມະນຸດອາດປະຕິເສດພາລະກິດຂອງພຣະອົງ, ການສະແດງຂອງພຣະອົງ, ຄວາມເປັນມະນຸດຂອງພຣະອົງ ແລະ ຕະຫຼອດທັງຊີວິດແຫ່ງຄວາມເປັນມະນຸດທີ່ທຳມະດາຂອງພຣະອົງ ແຕ່ບໍ່ມີໃຜສາມາດປະຕິເສດໄດ້ວ່າ ພຣະອົງນະມັດສະການພຣະເຈົ້າທີ່ຢູ່ໃນສະຫວັນດ້ວຍຫົວໃຈທີ່ແທ້ຈິງ; ບໍ່ມີໃຜສາມາດປະຕິເສດໄດ້ວ່າ ພຣະອົງໄດ້ມາເພື່ອປະຕິບັດຕາມຄວາມປະສົງຂອງພຣະບິດາທີ່ຢູ່ໃນສະຫວັນ ແລະ ບໍ່ມີໃຜສາມາດປະຕິເສດຄວາມຈິງໃຈທີ່ວ່າພຣະອົງສະແຫວງຫາພຣະເຈົ້າພຣະບິດາ. ເຖິງແມ່ນວ່າ ພາບລັກຂອງພຣະອົງບໍ່ເປັນທີ່ພໍໃຈຕໍ່ຄວາມຮູ້ສຶກ, ການສົນທະນາຂອງພຣະອົງບໍ່ໄດ້ປະກອບດ້ວຍບັນຍາກາດທີ່ພິເສດ ແລະ ພາລະກິດຂອງພຣະອົງບໍ່ໄດ້ສະທ້ານໂລກ ຫຼື ສັ່ນສະເທືອນສະຫວັນຕາມທີ່ມະນຸດຈິນຕະນາການ, ຄວາມຈິງກໍຄື ພຣະອົງເປັນພຣະຄຣິດ ຜູ້ເຊິ່ງປະຕິບັດຕາມຄວາມປະສົງຂອງພຣະບິດາທີ່ຢູ່ໃນສະຫວັນດ້ວຍຫົວໃຈທີ່ແທ້ຈິງ, ຍອມຢູ່ພາຍໃຕ້ພຣະບິດາທີ່ຢູ່ໃນສະຫວັນຢ່າງສົມບູນ ແລະ ເຊື່ອຟັງຈົນຕາຍ. ນີ້ກໍຍ້ອນວ່າ ແກ່ນແທ້ຂອງພຣະອົງແມ່ນແກ່ນແທ້ຂອງພຣະຄຣິດ. ຄວາມຈິງນີ້ຍາກທີ່ຈະໃຫ້ມະນຸດເຊື່ອ ແຕ່ມັນກໍແມ່ນຄວາມເປັນຈິງ. ເມື່ອພັນທະກິດຂອງພຣະຄຣິດຖືກເຮັດໃຫ້ສຳເລັດໂດຍສົມບູນແລ້ວ ມະນຸດຈະສາມາດເຫັນຈາກພາລະກິດຂອງພຣະອົງໄດ້ວ່າ ອຸປະນິໄສຂອງພຣະອົງ ແລະ ການເປັນຢູ່ຂອງພຣະອົງສະແດງໃຫ້ເຫັນເຖິງອຸປະນິໄສ ແລະ ການເປັນຢູ່ຂອງພຣະເຈົ້າທີ່ຢູ່ໃນສະຫວັນ. ໃນເວລານັ້ນ ບົດສະຫຼຸບຂອງ

ພາລະກິດທັງໝົດຂອງພຣະອົງສາມາດຢືນຢັນໄດ້ວ່າ ພຣະອົງເປັນພຣະທຳທີ່ກາຍເປັນມະນຸດຢ່າງແທ້ຈິງ ແລະ ບໍ່ຄືກັນກັບເນື້ອໜັງ ແລະ ເລືອດເນື້ອຂອງມະນຸດ. ທຸກບາດກ້າວຂອງພາລະກິດຂອງພຣະຄຣິດທີ່ຢູ່ເທິງແຜ່ນດິນໂລກແມ່ນມີຄວາມສຳຄັນໃນຕົວຂອງມັນເອງ ແຕ່ມະນຸດທີ່ຜະເຊີນກັບພາລະກິດທີ່ແທ້ຈິງຂອງແຕ່ລະບາດກ້າວນັ້ນ ແມ່ນບໍ່ສາມາດເຂົ້າໃຈຄວາມສຳຄັນຂອງພາລະກິດຂອງພຣະອົງໄດ້; ເປັນຕົ້ນໂດຍສະເພາະສຳລັບສອງສາມບາດກ້າວຂອງພາລະກິດທີ່ດຳເນີນໂດຍພຣະເຈົ້າໃນການບັງເກີດເປັນມະນຸດຄັ້ງທີ່ສອງຂອງພຣະອົງ. ຄົນສ່ວນຫຼາຍທີ່ພຽງແຕ່ໄດ້ຍິນ ຫຼື ເຫັນພຣະທຳຂອງພຣະຄຣິດ ແຕ່ບໍ່ເຄີຍເຫັນພຣະອົງບໍ່ມີແນວຄວາມຄິດກ່ຽວກັບພາລະກິດຂອງພຣະອົງ; ຄົນທີ່ເຫັນພຣະຄຣິດ ແລະ ໄດ້ຍິນພຣະທຳຂອງພຣະອົງ ພ້ອມທັງຜະເຊີນພາລະກິດຂອງພຣະອົງ ເຫັນມັນເປັນເລື່ອງຍາກທີ່ຈະຍອມຮັບພາລະກິດຂອງພຣະອົງ. ນີ້ບໍ່ແມ່ນເປັນຍ້ອນການປາກົດຕົວ ແລະ ຄວາມເປັນມະນຸດທຳມະດາຂອງພຣະຄຣິດບໍ່ແມ່ນລົດນິຍົມຂອງມະນຸດບໍ? ຄົນທີ່ຍອມຮັບພາລະກິດຂອງພຣະອົງຫຼັງຈາກທີ່ພຣະຄຣິດໄດ້ຈາກໄປຈະບໍ່ພົບກັບຄວາມຫຍຸ້ງຍາກດັ່ງກ່າວ ຍ້ອນພວກເຂົາພຽງແຕ່ຍອມຮັບພາລະກິດຂອງພຣະອົງເທົ່ານັ້ນ ແລະ ບໍ່ໄດ້ສຳຜັດກັບຄວາມເປັນມະນຸດທີ່ທຳມະດາຂອງພຣະຄຣິດ. ມະນຸດແທນທີ່ຈະປ່ອຍວາງແນວຄິດຕ່າງໆນາໆຂອງເຂົາກ່ຽວກັບພຣະເຈົ້າ ແຕ່ຊ້ຳພັດພາກັນສຳຫຼວດພຣະອົງຢ່າງຮຸນແຮງ; ນີ້ເປັນເພາະຄວາມຈິງທີ່ວ່າມະນຸດໃສ່ໃຈພຽງແຕ່ການປາກົດຂອງພຣະອົງເທົ່ານັ້ນ ແລະ ບໍ່ສາມາດຮັບຮູ້ແກ່ນແທ້ຂອງພຣະອົງໂດຍອີງຕາມພາລະກິດ ແລະ ພຣະທຳຂອງພຣະອົງນັ້ນ. ຖ້າມະນຸດຫຼັບຕາຕໍ່ການປາກົດຂອງພຣະຄຣິດ ຫຼື ຫຼີກເວັ້ນການສົນທະນາກ່ຽວກັບຄວາມເປັນມະນຸດຂອງພຣະຄຣິດ ແລະ ກ່າວເຖິງພຽງແຕ່ຄວາມເປັນພຣະເຈົ້າຂອງພຣະອົງເທົ່ານັ້ນ ເຊິ່ງມີພາລະກິດ ແລະ ພຣະທຳທີ່ມະນຸດບໍ່ສາມາດຮັບໄດ້ ແລ້ວແນວຄິດຕ່າງໆນາໆຂອງມະນຸດກໍຈະຫຼຸດລົງເຄິ່ງໜຶ່ງ ຈົນເຖິງຂັ້ນທີ່ວ່າ ຄວາມຫຍຸ້ງຍາກທຸກຢ່າງຂອງມະນຸດຈະໄດ້ຮັບການແກ້ໄຂ. ໃນລະຫວ່າງພາລະກິດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ ມະນຸດບໍ່ສາມາດທົນພຣະອົງໄດ້ ແລະ ເຕັມໄປດ້ວຍແນວຄິດຕ່າງໆນາໆກ່ຽວກັບພຣະອົງ ແລະ ເຫດການທີ່ພວກເຂົາຕໍ່ຕ້ານ ແລະ ບໍ່ເຊື່ອຟັງກໍພົບເຫັນໄດ້ທົ່ວໄປ. ມະນຸດບໍ່ສາມາດທົນຕໍ່ການເປັນຢູ່ຂອງພຣະເຈົ້າ, ບໍ່ສາມາດສະແດງຄວາມເມດຕາຕໍ່ຄວາມຖ່ອມຕົວ ແລະ ການລີ້ລັບຂອງພຣະຄຣິດ ຫຼື ຍົກໂທດໃຫ້ພຣະຄຣິດທີ່ມີແກ່ນແທ້ເຊື່ອຟັງພຣະບິດາທີ່ຢູ່ໃນສະຫວັນ. ດ້ວຍເຫດນັ້ນ ພຣະອົງບໍ່ສາມາດຢູ່ຮ່ວມກັບມະນຸດຊົ່ວນິດນິລັນ, ຫຼັງຈາກທີ່ພຣະອົງສຳເລັດພາລະກິດຂອງພຣະອົງ, ພຣະອົງກໍຈະຈາກໄປ ຍ້ອນວ່າມະນຸດບໍ່ເຕັມໃຈທີ່ຈະໃຫ້ພຣະອົງຢູ່ຄຽງຂ້າງພວກເຂົາ. ຖ້າມະນຸດບໍ່ສາມາດສະແດງຄວາມເມດຕາຕໍ່ພຣະອົງໃນລະຫວ່າງໄລຍະເວລາຂອງການປະຕິບັດພາລະກິດ ແລ້ວພວກເຂົາຈະສາມາດທົນຕໍ່ພຣະອົງທີ່ຢູ່ຄຽງຂ້າງພວກເຂົາຫຼັງຈາກທີ່ພຣະອົງສຳເລັດພັນທະກິດຂອງພຣະອົງ ເມື່ອພຣະອົງເບິ່ງພວກເຂົາຄ່ອຍໆສຳຜັດກັບພຣະທຳຂອງພຣະອົງໄດ້ແນວໃດ? ແລ້ວຫຼາຍຄົນຈະບໍ່ລົ້ມລົງຍ້ອນພຣະອົງບໍ? ມະນຸດພຽງແຕ່ອະນຸຍາດໃຫ້ພຣະອົງປະຕິບັດພາລະກິດເທິງແຜ່ນດິນໂລກ; ສິ່ງນີ້ຄືຄວາມກະລຸນາທີ່ຍິ່ງໃຫຍ່ສຸດຂອງມະນຸດ. ຖ້າບໍ່ແມ່ນຍ້ອນພາລະກິດຂອງພຣະອົງ ມະນຸດຄົງຈະຂັບໄລ່ພຣະອົງອອກຈາກໂລກຕັ້ງແຕ່ດົນແລ້ວ, ເພາະ

ສະນັ້ນ ຫຼັງຈາກພາລະກິດຂອງພຣະອົງສຳເລັດລົງແລ້ວ ພວກເຂົາຈະສະແດງຄວາມເມດຕາຕໍ່ພຣະອົງຫຼາຍໜ້ອຍສໍ່າໃດ? ແລ້ວມະນຸດຈະບໍ່ຂ້າພຣະອົງ ແລະ ທໍລະມານພຣະອົງຈົນຕາຍບໍ? ຖ້າພຣະອົງບໍ່ໄດ້ຖືກເອີ້ນວ່າພຣະຄຣິດ, ກໍເປັນໄປບໍ່ໄດ້ທີ່ພຣະອົງຈະສາມາດປະຕິບັດພາລະກິດທ່າມກາງມະນຸດຊາດໄດ້; ຖ້າພຣະອົງບໍ່ໄດ້ປະຕິບັດພາລະກິດດ້ວຍຕົວຕົນຂອງພຣະເຈົ້າເອງ ແລະ ປະຕິບັດພາລະກິດເປັນພຽງມະນຸດທຳມະດາແທນ ແລ້ວມະນຸດຈະບໍ່ທົນແມ່ນພຣະຄຳຂອງພຣະອົງແມ່ນແຕ່ປະໂຫຍກດຽວແຮງໄກທີ່ຈະທົນຕໍ່ສ່ວນເລັກນ້ອຍສຸດໃນພາລະກິດຂອງພຣະອົງເລີຍ. ດ້ວຍເຫດນັ້ນ ພຣະອົງພຽງແຕ່ສາມາດໃຊ້ຕົວຕົນນີ້ຂອງພຣະອົງໃນການປະຕິບັດພາລະກິດຂອງພຣະອົງເທົ່ານັ້ນ. ດ້ວຍວິທີນີ້ ພາລະກິດຂອງພຣະອົງຈຶ່ງມີອຳນາດຫຼາຍກວ່າເວລາທີ່ພຣະອົງບໍ່ໄດ້ປະຕິບັດພາລະກິດແບບນັ້ນ ຍ້ອນມະນຸດທຸກຄົນເຕັມໃຈທີ່ຈະເຊື່ອຟັງຖານະ ແລະ ຕົວຕົນທີ່ຍິ່ງໃຫຍ່. ຖ້າພຣະອົງບໍ່ໃຊ້ຕົວຕົນຂອງພຣະເຈົ້າເອງໃນຂະນະທີ່ພຣະອົງປະຕິບັດພາລະກິດ ຫຼື ປາກົດຕົວເປັນພຣະເຈົ້າເອງ ແລ້ວພຣະອົງຈະບໍ່ມີໂອກາດທີ່ຈະປະຕິບັດພາລະກິດເລີຍ. ເຖິງແມ່ນເປັນຄວາມຈິງທີ່ວ່າພຣະອົງມີແກ່ນແທ້ຂອງພຣະເຈົ້າ ແລະ ການເປັນຢູ່ຂອງພຣະຄຣິດ ມະນຸດກໍຈະບໍ່ຜ່ອນຄາຍ ແລະ ອະນຸຍາດໃຫ້ພຣະອົງປະຕິບັດພາລະກິດຢ່າງງ່າຍດາຍທ່າມກາງມະນຸດຊາດ. ພຣະອົງໃຊ້ຕົວຕົນຂອງພຣະເຈົ້າເອງໃນພາລະກິດຂອງພຣະອົງ; ເຖິງແມ່ນວ່າ ພາລະກິດດັ່ງກ່າວຈະມີອຳນາດຫຼາຍກວ່າພາລະກິດທີ່ປາສະຈາກພາບລັກສະນະດັ່ງກ່າວຕໍ່ຫຼາຍສິບເທົ່າ, ມະນຸດຍັງບໍ່ເຊື່ອຟັງພຣະອົງຢ່າງເຕັມປ່ຽມ ຍ້ອນມະນຸດພຽງແຕ່ຍອມຢູ່ພາຍໃຕ້ຖານະຂອງພຣະອົງ ແລະ ບໍ່ແມ່ນແກ່ນແທ້ຂອງພຣະອົງ. ຖ້າເປັນດັ່ງນັ້ນ ບາງເທື່ອ ມື້ໜຶ່ງຖ້າພຣະຄຣິດລົງມາຈາກຕຳແໜ່ງຂອງພຣະອົງ ມະນຸດຈະສາມາດອະນຸຍາດໃຫ້ພຣະອົງຍັງຄົງມີຊີວິດຢູ່ແມ່ນແຕ່ມື້ດຽວບໍ? ພຣະເຈົ້າເຕັມໃຈອາໄສຢູ່ເທິງແຜ່ນດິນໂລກກັບມະນຸດ ເພື່ອພຣະອົງອາດເຫັນຜົນພາລະກິດທີ່ປະຕິບັດດ້ວຍມືຂອງພຣະອົງຈະນຳມາສູ່ຄວາມສຳເລັດສືບຕໍ່ໄປເປັນນິດ. ເຖິງຢ່າງໃດກໍຕາມ ມະນຸດບໍ່ສາມາດທົນການຊົງຢູ່ຂອງພຣະອົງໄດ້ແມ່ນແຕ່ມື້ດຽວ ສະນັ້ນ ພຣະອົງເຮັດໄດ້ແຕ່ຍອມຈຳນົນ. ຖືວ່າເປັນຄວາມເມດຕາ ແລະ ຄວາມກະລຸນາທີ່ຍິ່ງໃຫຍ່ສຸດແລ້ວທີ່ມະນຸດອະນຸຍາດໃຫ້ພຣະເຈົ້າປະຕິບັດພາລະກິດທີ່ພຣະອົງຄວນປະຕິບັດທ່າມກາງມະນຸດ ແລະ ເຮັດໃຫ້ພັນທະກິດຂອງພຣະອົງສຳເລັດ. ເຖິງແມ່ນວ່າ ຄົນທີ່ຖືກເອົາຊະນະໂດຍພຣະເຈົ້າເປັນການສ່ວນຕົວໄດ້ສະແດງຄວາມກະລຸນາດັ່ງກ່າວຕໍ່ກັບພຣະອົງ ພວກເຂົາກໍພຽງແຕ່ອະນຸຍາດໃຫ້ພຣະອົງຢູ່ຕໍ່ໄດ້ຈົນກວ່າພາລະກິດຂອງພຣະອົງສຳເລັດລົງ ແລະ ຫລັງຈາກນັ້ນກໍບໍ່ອະນຸຍາດໃຫ້ພຣະອົງຢູ່ຕໍ່ໄປແມ່ນແຕ່ນາທີດຽວ. ຖ້າເປັນດັ່ງນັ້ນ ຄົນທີ່ພຣະອົງບໍ່ໄດ້ເອົາຊະນະເດ? ເຫດຜົນທີ່ມະນຸດປະຕິບັດຕໍ່ພຣະເຈົ້າທີ່ບັງເກີດເປັນມະນຸດດ້ວຍວິທີນີ້ ບໍ່ແມ່ນຍ້ອນພຣະອົງເປັນພຣະຄຣິດທີ່ມີເປືອກນອກຂອງມະນຸດທຳມະດາບໍ? ຖ້າພຣະອົງມີພຽງແຕ່ຄວາມເປັນພຣະເຈົ້າ ແລະ ບໍ່ມີຄວາມເປັນມະນຸດທຳມະດາ ແລ້ວຄວາມຫຍຸ້ງຍາກຕ່າງໆຂອງມະນຸດຈະບໍ່ໄດ້ຮັບການແກ້ໄຂງ່າຍເກີນໄປບໍ? ມະນຸດຮັບຮູ້ຄວາມເປັນພຣະເຈົ້າຂອງພຣະອົງດ້ວຍຄວາມບໍ່ພໍໃຈ ແລະ ບໍ່ສົນໃຈຕໍ່ເປືອກນອກຂອງມະນຸດທຳມະດາຂອງພຣະອົງ ເຖິງແມ່ນວ່າ ແກ່ນແທ້ຂອງພຣະອົງກໍມາຈາກພຣະຄຣິດຜູ້ເຊິ່ງຍອມຢູ່ພາຍໃຕ້ຄວາມປະສົງຂອງພຣະບິດາທີ່ຢູ່ໃນສະຫວັນຢ່າງຊັດເຈນ. ຖ້າ

ເປັນດັ່ງນັ້ນ ພຣະອົງພຽງແຕ່ສາມາດຍົກເລີກພາລະກິດຂອງພຣະອົງທີ່ຢູ່ທ່າມກາງມະນຸດເພື່ອແບ່ງປັນຄວາມສຸກ ແລະ ຄວາມທຸກກັບພວກເຂົາ ຍ້ອນມະນຸດບໍ່ສາມາດທົນຕໍ່ການເປັນຢູ່ຂອງພຣະອົງໄດ້ອີກຕໍ່ໄປ.

# ການຟື້ນຟູຊີວິດປົກກະຕິຂອງມະນຸດ ແລະ ການນຳພາເຂົາໄປສູ່ປາຍທາງທີ່ມະຫັດສະຈັນ

ມະນຸດເຂົ້າໃຈພາລະກິດໃນປັດຈຸບັນ ແລະ ພາລະກິດໃນອະນາຄົດພຽງແຕ່ໜ້ອຍດຽວ ແຕ່ເຂົາບໍ່ເຂົ້າໃຈຈຸດໝາຍປາຍທາງທີ່ມະນຸດຊາດຈະເຂົ້າສູ່. ໃນຖານະທີ່ເປັນສິ່ງຖືກສ້າງ ມະນຸດຄວນປະຕິບັດໜ້າທີ່ຂອງສິ່ງຖືກສ້າງ: ມະນຸດຄວນຕິດຕາມພຣະເຈົ້າໃນທຸກສິ່ງທີ່ພຣະອົງປະຕິບັດ; ພວກເຈົ້າຄວນດຳເນີນການໃນຫົນທາງໃດກໍຕາມທີ່ເຮົາບອກກັບພວກເຈົ້າ. ເຈົ້າບໍ່ມີທາງຈັດການສິ່ງຕ່າງໆສຳລັບຕົວເຈົ້າເອງໄດ້ ແລະ ເຈົ້າບໍ່ມີຄວາມລຶກລັບເໜືອຕົວເຈົ້າເອງໄດ້; ທຸກສິ່ງຕ້ອງປະໄວ້ທີ່ການຈັດແຈງຂອງພຣະເຈົ້າ ແລະ ທຸກສິ່ງແມ່ນຖືກກຳໄວ້ຢູ່ພາຍໃນມືຂອງພຣະອົງ. ຖ້າພາລະກິດຂອງພຣະເຈົ້າໄດ້ຈັດກຽມແກ່ມະນຸດດ້ວຍຈຸດຈົບ, ຈຸດໝາຍປາຍທາງທີ່ມະຫັດສະຈັນໄວ້ລ່ວງໜ້າ ແລະ ຖ້າພຣະເຈົ້ານຳໃຊ້ສິ່ງນີ້ເພື່ອລໍ້ໃຈມະນຸດ ແລະ ເຮັດໃຫ້ມະນຸດຕິດຕາມພຣະອົງ ນັ້ນກໍຄື ຖ້າພຣະອົງສ້າງຂໍ້ສັນຍາກັບມະນຸດ ແລ້ວສິ່ງນີ້ຈະບໍ່ແມ່ນການເອົາຊະນະ ຫຼື ມັນບໍ່ແມ່ນເພື່ອປະຕິບັດພາລະກິດໃນຊີວິດຂອງມະນຸດ. ຖ້າພຣະເຈົ້າຕ້ອງໃຊ້ຈຸດຈົບຂອງມະນຸດເພື່ອຄວບຄຸມມະນຸດ ແລະ ຮັບເອົາຫົວໃຈຂອງເຂົາ, ແລ້ວໃນເລື່ອງນີ້ ພຣະອົງຈະບໍ່ໄດ້ເຮັດໃຫ້ມະນຸດສົມບູນ ຫຼື ພຣະອົງຈະບໍ່ສາມາດຮັບເອົາມະນຸດ, ແຕ່ກົງກັນຂ້າມ ພຣະອົງຈະໃຊ້ຈຸດໝາຍປາຍທາງເພື່ອຄວບຄຸມເຂົາ. ມະນຸດບໍ່ສົນໃຈໃນສິ່ງໃດນອກຈາກຈຸດຈົບໃນອະນາຄົດ, ຈຸດໝາຍປາຍທາງສຸດທ້າຍ ແລະ ບໍ່ວ່າຈະມີສິ່ງດີໆໃຫ້ຄາດຫວັງ ຫຼື ບໍ່. ຖ້າມະນຸດໄດ້ຮັບຄວາມຫວັງທີ່ສວຍງາມໃນລະຫວ່າງພາລະກິດແຫ່ງການເອົາຊະນະ ແລະ ຖ້າກ່ອນໜ້າການເອົາຊະນະມະນຸດ, ເຂົາໄດ້ຮັບຈຸດໝາຍປາຍທາງທີ່ເໝາະສົມໃຫ້ສະແຫວງຫາ ແລ້ວການເອົາຊະນະມະນຸດຈະບໍ່ແມ່ນແຕ່ບັນລຸຜົນຂອງມັນເທົ່ານັ້ນ, ແຕ່ຜົນໄດ້ຮັບຂອງພາລະກິດແຫ່ງການເອົາຊະນະກໍຍັງຈະໄດ້ຮັບອິດທິພົນອີກດ້ວຍ. ນັ້ນໝາຍຄວາມວ່າ ພາລະກິດແຫ່ງການເອົາຊະນະບັນລຸຜົນຂອງມັນໂດຍການເອົາໂຊກຊະຕາອອກໄປ ແລະ ຄວາມຄາດຫວັງຂອງມະນຸດ ແລະ ການພິພາກສາ ແລະ ການຂ້ຽນຕີອຸປະນິໄສທີ່ກະບົດຂອງມະນຸດ. ມັນບໍ່ໄດ້ບັນລຸໂດຍການເຮັດຂໍ້ສັນຍາກັບມະນຸດ ນັ້ນກໍຄື ໂດຍການມອບພອນ ແລະ ພຣະຄຸນໃຫ້ກັບມະນຸດ ແຕ່ກົງກັນຂ້າມແມ່ນໂດຍການເປີດເຜີຍຄວາມຊື່ສັດຂອງມະນຸດຜ່ານການຍຶດເອົາ "ອິດສະຫຼະພາບ" ຂອງເຂົາ ແລະ ທຳລາຍລ້າງຄວາມຄາດຫວັງຂອງເຂົາ. ນີ້ຄືແກ່ນແທ້ຂອງພາລະກິດແຫ່ງການເອົາຊະນະ. ຖ້າມະນຸດໄດ້ຮັບຄວາມຫວັງທີ່ສວຍງາມໃນຕອນເລີ່ມຕົ້ນ ແລະ ພາລະກິດແຫ່ງການຂ້ຽນຕີ ແລະ ການພິພາກສາຖືກເຮັດໃຫ້ສຳເລັດໃນພາຍຫຼັງ ແລ້ວມະນຸດກໍຈະຍອມຮັບການຂ້ຽນຕີ ແລະ ການພິພາກສານີ້ບົນພື້ນຖານທີ່ເຂົາຄາດຫວັງ ແລະ ໃນທີ່ສຸດ ຄວາມເຊື່ອຟັງທີ່ບໍ່ມີເງື່ອນໄຂ ແລະ ການນະມັດສະການພຣະຜູ້ສ້າງໂດຍສິ່ງຖືກສ້າງທັງປວງຂອງພຣະອົງກໍຈະບໍ່ຖືກບັນລຸ; ຈະມີພຽງແຕ່ການເຊື່ອຟັງທີ່ລັບຫູລັບຕາ ແລະ ຂາດຄວາມເຂົ້າໃຈ ຫຼື ຖ້າບໍ່ດັ່ງນັ້ນ ມະນຸດກໍຈະຮຽກຮ້ອງຈາກພຣະເຈົ້າຢ່າງຕາບອດ ແລະ ມັນກໍເປັນໄປບໍ່ໄດ້ທີ່ຈະເອົາຊະນະຫົວໃຈຂອງມະນຸດຢ່າງສົມບູນ. ດັ່ງນັ້ນ ມັນຈຶ່ງເປັນໄປບໍ່ໄດ້ທີ່ພາລະກິດແຫ່ງການເອົາຊະນະ

ດັ່ງກ່າວຈະບໍ່ສາມາດຮັບເອົາມະນຸດໄດ້ ຫຼື ຍິ່ງໄປກວ່ານັ້ນກໍເປັນພະຍານໃຫ້ກັບພຣະເຈົ້າໄດ້. ສິ່ງຖືກສ້າງດັ່ງກ່າວຈະບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາ ແລະ ຈະພຽງແຕ່ຕໍ່ລອງກັບພຣະເຈົ້າ; ສິ່ງນີ້ຈະບໍ່ແມ່ນການເອົາຊະນະ ແຕ່ເປັນຄວາມເມດຕາ ແລະ ພອນ. ບັນຫາໃຫຍ່ທີ່ສຸດກັບມະນຸດຄື ເຂົາບໍ່ຄິດເຖິງສິ່ງອື່ນນອກຈາກໂຊກຊະຕາ ແລະ ຄວາມຄາດຫວັງຂອງເຂົາ ແລະ ບູຊາສິ່ງເຫຼົ່ານີ້. ມະນຸດສະແຫວງຫາພຣະເຈົ້າເພື່ອຜົນປະໂຫຍດແຫ່ງໂຊກຊະຕາ ແລະ ຄວາມຄາດຫວັງຂອງເຂົາ; ເຂົາບໍ່ໄດ້ນະມັດສະການພຣະເຈົ້າ ຍ້ອນຄວາມຮັກຂອງເຂົາສໍາລັບພຣະອົງ. ແລ້ວດ້ວຍເຫດນັ້ນ ໃນການເອົາຊະນະມະນຸດ, ຄວາມເຫັນແກ່ຕົວຂອງມະນຸດ, ຄວາມໂລບມາກ ແລະ ທຸກສິ່ງທີ່ເປັນອຸປະສັກຕໍ່ການທີ່ເຂົານະມັດສະການພຣະເຈົ້າແມ່ນຕ້ອງຖືກຈັດການ ແລະ ກໍາຈັດທັງໝົດ. ດ້ວຍການເຮັດແບບນັ້ນ ຜົນແຫ່ງການເອົາຊະນະຂອງມະນຸດຈຶ່ງຈະຖືກບັນລຸ. ຜົນຕາມມາກໍຄື ໃນຂັ້ນຕອນທໍາອິດຂອງການເອົາຊະນະມະນຸດ ມັນຈຶ່ງຈໍາເປັນຕ້ອງລົບລ້າງຄວາມທະເຍີທະຍານທີ່ບ້າປ່ວງ ແລະ ຄວາມອ່ອນແອທີ່ຮ້າຍແຮງສຸດຂອງມະນຸດ ແລະ ຜ່ານສິ່ງນີ້ຈຶ່ງຈະເປີດເຜີຍຄວາມຮັກພຣະເຈົ້າຂອງມະນຸດ ແລະ ປ່ຽນແປງຄວາມຮູ້ຂອງເຂົາທີ່ກ່ຽວກັບຊີວິດຂອງມະນຸດ, ມຸມມອງຂອງເຂົາກ່ຽວກັບພຣະເຈົ້າ ແລະ ຄວາມໝາຍຂອງການມີຊີວິດຢູ່ຂອງເຂົາ. ດ້ວຍວິທີນີ້ ຄວາມຮັກພຣະເຈົ້າຂອງມະນຸດຈຶ່ງຖືກຊໍາລະລ້າງ ເຊິ່ງໝາຍຄວາມວ່າ ຫົວໃຈຂອງມະນຸດຖືກເອົາຊະນະ. ແຕ່ໃນທ່າທີຂອງພຣະເຈົ້າທີ່ມີຕໍ່ສິ່ງຖືກສ້າງທັງໝົດແລ້ວ ພຣະອົງບໍ່ໄດ້ເອົາຊະນະພຽງແຕ່ຍ້ອນຜົນປະໂຫຍດແຫ່ງການເອົາຊະນະ; ກົງກັນຂ້າມພຣະອົງເອົາຊະນະເພື່ອຮັບເອົາມະນຸດ, ເພື່ອຜົນປະໂຫຍດແຫ່ງສະຫງ່າລາສີຂອງພຣະອົງເອງ ແລະ ເພື່ອຟື້ນຟູລັກສະນະດັ່ງເດີມໃນຊ່ວງທໍາອິດຂອງມະນຸດ. ຖ້າພຣະອົງຕ້ອງເອົາຊະນະພຽງແຕ່ເພື່ອຜົນປະໂຫຍດແຫ່ງການເອົາຊະນະເທົ່ານັ້ນ ແລ້ວຄວາມໝາຍຂອງພາລະກິດແຫ່ງການເອົາຊະນະກໍຈະສູນເສຍໄປ. ນັ້ນໝາຍຄວາມວ່າ ຖ້າຫຼັງຈາກເອົາຊະນະມະນຸດແລ້ວ ພຣະເຈົ້າລ້າງມືຂອງພຣະອົງຈາກມະນຸດ ແລະ ບໍ່ສົນໃຈຕໍ່ຊີວິດ ຫຼື ຄວາມຕາຍຂອງມະນຸດ ແລ້ວສິ່ງນີ້ກໍບໍ່ແມ່ນການຄຸ້ມຄອງມະນຸດຊາດ ຫຼື ການເອົາຊະນະມະນຸດກໍຈະບໍ່ແມ່ນເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນ. ມີພຽງແຕ່ການຮັບເອົາມະນຸດຫຼັງຈາກທີ່ເອົາຊະນະເຂົາ ແລະ ການທີ່ເຂົາມາເຖິງຈຸດໝາຍປາຍທາງທີ່ມະຫັດສະຈັນໃນທີ່ສຸດເທົ່ານັ້ນຈຶ່ງຢູ່ໃນຫົວໃຈຂອງພາລະກິດແຫ່ງຄວາມລອດພົ້ນທັງໝົດ ແລະ ດ້ວຍວິທີນີ້ເທົ່ານັ້ນຈຶ່ງຈະສາມາດບັນລຸຕາມເປົ້າໝາຍແຫ່ງຄວາມລອດພົ້ນຂອງມະນຸດໄດ້. ເວົ້າອີກຢ່າງໜຶ່ງກໍຄື ມີພຽງແຕ່ການມາເຖິງຈຸດໝາຍປາຍທາງທີ່ສວຍງາມຂອງມະນຸດ ແລະ ການທີ່ເຂົາເຂົ້າສູ່ການພັກຜ່ອນເທົ່ານັ້ນທີ່ເປັນຄວາມຄາດຫວັງທີ່ສິ່ງຖືກສ້າງທັງໝົດຄວນມີ ແລະ ເປັນພາລະກິດທີ່ພຣະຜູ້ສ້າງຄວນເຮັດໃຫ້ສໍາເລັດ. ຖ້າມະນຸດຕ້ອງປະຕິບັດພາລະກິດນີ້ ແລ້ວມັນກໍຈະຈໍາກັດເກີນໄປ: ມັນສາມາດນໍາມະນຸດໄປເຖິງຈຸດໃດໜຶ່ງ, ແຕ່ມັນຈະບໍ່ສາມາດນໍາມະນຸດໄປເຖິງຈຸດໝາຍປາຍທາງຊົ່ວນິດນິລັນ. ມະນຸດບໍ່ສາມາດຕັດສິນຊະຕາກໍາຂອງມະນຸດ ຫຼື ຍິ່ງໄປກວ່ານັ້ນ ເຂົາບໍ່ສາມາດຮັບຮອງຄວາມຄາດຫວັງ ແລະ ຈຸດໝາຍປາຍທາງໃນອະນາຄົດຂອງມະນຸດໄດ້. ເຖິງຢ່າງໃດກໍຕາມ ພາລະກິດທີ່ພຣະເຈົ້າປະຕິບັດແມ່ນແຕກຕ່າງກັນ. ຍ້ອນພຣະອົງສ້າງມະນຸດ ພຣະອົງກໍນໍາພາເຂົາ; ຍ້ອນພຣະອົງຊ່ວຍມະນຸດໃຫ້ລອດພົ້ນ ພຣະອົງກໍ

ຊ່ວຍເຂົາຢ່າງທົ່ວເຖິງ ແລະ ຈະຮັບເອົາເຂົາຢ່າງສົມບູນ; ຍ້ອນພຣະອົງນຳພາມະນຸດ ພຣະອົງຈະນຳເຂົາໄປສູ່ຈຸດໝາຍປາຍທາງທີ່ເໝາະສົມ; ແລະ ຍ້ອນພຣະອົງສ້າງ ແລະ ຄຸ້ມຄອງມະນຸດ ພຣະອົງຕ້ອງຮັບຜິດຊອບຕໍ່ໂຊກຊະຕາ ແລະ ຄວາມຄາດຫວັງຂອງມະນຸດ. ມັນຄືສິ່ງນີ້ທີ່ເປັນພາລະກິດທີ່ພຣະຜູ້ສ້າງປະຕິບັດ. ເຖິງແມ່ນພາລະກິດແຫ່ງການເອົາຊະນະຈະຖືກບັນລຸໂດຍການລຶບລ້າງຄວາມຄາດຫວັງອອກຈາກມະນຸດ, ມະນຸດກໍຕ້ອງຖືກນຳໄປສູ່ຈຸດໝາຍປາຍທາງທີ່ເໝາະສົມໃນທີ່ສຸດ ເຊິ່ງພຣະເຈົ້າໄດ້ຈັດກຽມໄວ້ໃຫ້ກັບເຂົາແລ້ວ. ມັນແມ່ນຍ້ອນພຣະເຈົ້າປັ້ນມະນຸດຢ່າງແນ່ນອນ ຈຶ່ງເຮັດໃຫ້ມະນຸດມີຈຸດໝາຍປາຍທາງ ແລະ ໂຊກຊະຕາຂອງເຂົາຈຶ່ງຖືກຮັບຮອງ. ໃນນີ້ ຈຸດໝາຍປາຍທາງເໝາະສົມທີ່ກ່າວເຖິງບໍ່ແມ່ນຄວາມຫວັງ ແລະ ຄວາມຄາດຫວັງຂອງມະນຸດທີ່ຖືກກຳຈັດໃນອະດີດ; ທັງສອງຢ່າງແມ່ນແຕກຕ່າງກັນ. ສິ່ງທີ່ມະນຸດຄາດຫວັງ ແລະ ສະແຫວງຫາແມ່ນຄວາມປາຖະໜາທີ່ເກີດຂຶ້ນຈາກການສະແຫວງຫາຄວາມຕ້ອງການໃນເນື້ອໜັງທີ່ຫຼາຍເກີນຄວນຂອງເຂົາ, ແທນທີ່ຈະແມ່ນຈຸດໝາຍປາຍທາງທີ່ເໝາະສົມກັບມະນຸດ. ໃນຂະນະດຽວກັນ ສິ່ງທີ່ພຣະເຈົ້າຈັດກຽມໃຫ້ກັບມະນຸດແມ່ນພອນ ແລະ ສັນຍາທີ່ເໝາະສົມກັບມະນຸດ ຫຼັງຈາກທີ່ເຂົາຖືກເຮັດໃຫ້ບໍລິສຸດ ເຊິ່ງພຣະເຈົ້າໄດ້ຈັດກຽມໃຫ້ກັບມະນຸດຫຼັງຈາກສ້າງໂລກ ແລະ ເຊິ່ງບໍ່ໄດ້ຮັບມົນທິນຈາກທາງເລືອກ, ແນວຄິດ, ຈິນຕະນາການ ຫຼື ເນື້ອໜັງຂອງມະນຸດ. ຈຸດໝາຍປາຍທາງນີ້ບໍ່ໄດ້ຖືກຈັດກຽມໃຫ້ກັບຄົນໃດໜຶ່ງເທົ່ານັ້ນ ແຕ່ເປັນສະຖານທີ່ພັກຜ່ອນຂອງບັນດາມວນມະນຸດຊາດ. ແລ້ວດ້ວຍເຫດນັ້ນ ຈຸດໝາຍປາຍທາງນີ້ຈຶ່ງເປັນຈຸດໝາຍປາຍທາງທີ່ເໝາະສົມທີ່ສຸດສຳລັບມະນຸດຊາດ.

ພຣະຜູ້ສ້າງປະສົງທີ່ຈະປັ້ນແຕ່ງສິ່ງຖືກສ້າງທຸກຢ່າງ. ເຈົ້າບໍ່ຕ້ອງປະຖິ້ມ ຫຼື ບໍ່ເຊື່ອຟັງສິ່ງໃດກໍຕາມທີ່ພຣະອົງປະຕິບັດ ຫຼື ເຈົ້າບໍ່ຄວນກະບົດຕໍ່ພຣະອົງ. ເມື່ອພາລະກິດທີ່ພຣະອົງປະຕິບັດໄດ້ບັນລຸຕາມເປົ້າໝາຍຂອງພຣະອົງໃນທີ່ສຸດ ດ້ວຍສິ່ງນີ້ພຣະອົງກໍຈະໄດ້ຮັບສະຫງ່າລາສີ. ໃນປັດຈຸບັນ ເປັນຫຍັງຈຶ່ງບໍ່ເວົ້າວ່າ ເຈົ້າເປັນລູກຫຼານຂອງໂມອາບ ຫຼື ເປັນເຊື້ອສາຍຂອງມັງກອນແດງໃຫຍ່? ເປັນຫຍັງຈຶ່ງບໍ່ມີການເວົ້າເຖິງຜູ້ຄົນທີ່ຖືກເລືອກ ແລະ ມີພຽງແຕ່ການເວົ້າເຖິງສິ່ງຖືກສ້າງ? ສິ່ງຖືກສ້າງດັ່ງກ່າວຄືນາມມະຍົດດັ່ງເດີມຂອງມະນຸດ ແລະ ມັນແມ່ນສິ່ງນີ້ທີ່ບົ່ງບອກເຖິງຕົວຕົນທີ່ມີມາຕັ້ງແຕ່ເກີດຂອງເຂົານັ້ນເອງ. ຊື່ແຕກຕ່າງກັນກໍຍ້ອນວ່າຍຸກ ແລະ ຊ່ວງເວລາຂອງພາລະກິດແຕກຕ່າງກັນ, ໃນຄວາມເປັນຈິງມະນຸດເປັນສິ່ງຖືກສ້າງທຳມະດາ. ສິ່ງຖືກສ້າງທັງປວງບໍ່ວ່າພວກເຂົາຈະເສື່ອມຊາມທີ່ສຸດ ຫຼື ບໍລິສຸດທີ່ສຸດ ກໍຕ້ອງປະຕິບັດໜ້າທີ່ຂອງສິ່ງຖືກສ້າງ. ເມື່ອພຣະອົງປະຕິບັດພາລະກິດແຫ່ງການເອົາຊະນະພຣະເຈົ້າບໍ່ໄດ້ຄວບຄຸມເຈົ້າໂດຍໃຊ້ຄວາມຄາດຫວັງ, ໂຊກຊາຕາ ຫຼື ຈຸດໝາຍປາຍທາງ. ມັນບໍ່ຈຳເປັນທີ່ຈະປະຕິບັດພາລະກິດດ້ວຍວິທີນີ້. ເປົ້າໝາຍຂອງພາລະກິດແຫ່ງການເອົາຊະນະແມ່ນເພື່ອເຮັດໃຫ້ມະນຸດປະຕິບັດໜ້າທີ່ຂອງສິ່ງຖືກສ້າງ, ເພື່ອເຮັດໃຫ້ເຂົານະມັດສະການພຣະຜູ້ສ້າງ ແລະ ພຽງແຕ່ຫຼັງຈາກສິ່ງນີ້ເທົ່ານັ້ນ ເຂົາຈຶ່ງຈະສາມາດເຂົ້າສູ່ຈຸດໝາຍປາຍທາງທີ່ມະຫັດສະຈັນໄດ້. ໂຊກຊາຕາຂອງມະນຸດຖືກຄວບຄຸມໂດຍມືຂອງພຣະເຈົ້າ. ເຈົ້າບໍ່ສາມາດຄວບຄຸມຕົວເຈົ້າເອງໄດ້. ເຖິງແມ່ນຈະຟ້າວ ແລະ ຫຍຸ້ງກັບຕົວເຂົາເອງຢູ່ຕະຫຼອດເວລາກໍຕາມ ມະນຸດກໍຍັງຄົງບໍ່ສາມາດຄວບຄຸມຕົວເອງໄດ້. ຖ້າ

ເຈົ້າສາມາດຮູ້ຈັກຄວາມຄາດຫວັງຂອງເຈົ້າເອງ, ຖ້າເຈົ້າສາມາດຄວບຄຸມໂຊກຊາຕາຂອງເຈົ້າເອງ ເຈົ້າຈະຍັງເປັນສິ່ງຖືກສ້າງບໍ? ສະຫຼຸບກໍຄື ບໍ່ວ່າພຣະເຈົ້າຈະປະຕິບັດພາລະກິດແນວໃດກໍຕາມ ພາລະກິດທັງໝົດຂອງພຣະອົງກໍເພື່ອຜົນປະໂຫຍດຂອງມະນຸດ. ຍົກຕົວຢ່າງ ສະຫວັນ ແລະ ແຜ່ນດິນໂລກ ແລະທຸກສິ່ງທີ່ພຣະເຈົ້າສ້າງຂຶ້ນເພື່ອຮັບໃຊ້ມະນຸດ ເຊັ່ນ: ດວງເດືອນ, ດວງຕາເວັນ ແລະ ດວງດາວທີ່ພຣະອົງສ້າງຂຶ້ນສຳລັບມະນຸດ, ສັດ ແລະ ພືດ, ລະດູໃບໄມ້ປົ່ງ, ລະດູຮ້ອນ, ລະດູໃບໄມ້ຫຼົ່ນ ແລະ ລະດູໜາວ ແລະ ອື່ນໆອີກ, ທຸກສິ່ງແມ່ນຖືກສ້າງຂຶ້ນເພື່ອຜົນປະໂຫຍດແຫ່ງການມີຊີວິດຢູ່ຂອງມະນຸດ. ດ້ວຍເຫດນັ້ນ ບໍ່ວ່າພຣະອົງຈະຂ້ຽນຕີ ແລະ ພິພາກສາມະນຸດແນວໃດກໍຕາມ ມັນກໍເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນຂອງມະນຸດທັງໝົດ. ເຖິງແມ່ນວ່າ ພຣະອົງຍຶດເອົາຄວາມຫວັງທາງເນື້ອໜັງຈາກມະນຸດ ມັນກໍເພື່ອຜົນປະໂຫຍດແຫ່ງການເຮັດໃຫ້ມະນຸດບໍລິສຸດຂຶ້ນ ແລະ ການເຮັດໃຫ້ມະນຸດບໍລິສຸດຂຶ້ນກໍຖືກປະຕິບັດເພື່ອວ່າເຂົາຈະສາມາດລອດພົ້ນໄດ້. ເຊິ່ງຈຸດໝາຍປາຍທາງຂອງມະນຸດແມ່ນຢູ່ໃນມືຂອງພຣະຜູ້ສ້າງ ສະນັ້ນ ມະນຸດຈະສາມາດຄວບຄຸມຕົວເອງໄດ້ແນວໃດ?

ເມື່ອພາລະກິດແຫ່ງການເອົາຊະນະຖືກເຮັດໃຫ້ສຳເລັດ ມະນຸດຈະຖືກນຳໄປສູ່ໂລກທີ່ສວຍງາມ. ແນ່ນອນ ຊີວິດນີ້ກໍຈະຍັງຢູ່ເທິງແຜ່ນດິນໂລກ ແຕ່ມັນຈະບໍ່ເປັນຄືກັບຊີວິດມະນຸດໃນປັດຈຸບັນຢ່າງສິ້ນເຊີງ. ມັນເປັນຊີວິດທີ່ມະນຸດຊາດຈະມີຫຼັງຈາກທີ່ໄດ້ເອົາຊະນະບັນດາມວນມະນຸດຊາດ, ມັນຈະເປັນການເລີ່ມຕົ້ນໃໝ່ສຳລັບມະນຸດເທິງແຜ່ນດິນໂລກ ແລະ ການທີ່ມະນຸດຊາດມີຊີວິດດັ່ງກ່າວຈະເປັນເຄື່ອງພິສູດວ່າ ມະນຸດຊາດໄດ້ເຂົ້າສູ່ອານາຈັກໃໝ່ທີ່ສວຍງາມແລ້ວ. ມັນຈະເປັນການເລີ່ມຕົ້ນຂອງຊີວິດຂອງມະນຸດ ແລະ ພຣະເຈົ້າເທິງແຜ່ນດິນໂລກ. ຫຼັງຈາກທີ່ມະນຸດໄດ້ຮັບການເຮັດໃຫ້ບໍລິສຸດ ແລະ ຖືກເອົາຊະນະ, ຂໍ້ສັນຍາສຳລັບຊີວິດທີ່ສວຍງາມດັ່ງກ່າວກໍຄື ເຂົາຈະຕ້ອງຍອມຢູ່ພາຍໃຕ້ພຣະຜູ້ສ້າງ. ດ້ວຍເຫດນັ້ນ ພາລະກິດແຫ່ງການເອົາຊະນະແມ່ນຂັ້ນຕອນສຸດທ້າຍຂອງພາລະກິດຂອງພຣະເຈົ້າກ່ອນທີ່ມະນຸດຊາດຈະເຂົ້າສູ່ຈຸດໝາຍປາຍທາງທີ່ມະຫັດສະຈັນນັ້ນ. ຊີວິດດັ່ງກ່າວແມ່ນຊີວິດໃນອະນາຄົດຂອງມະນຸດເທິງແຜ່ນດິນໂລກ, ມັນເປັນຊີວິດທີ່ສວຍງາມທີ່ສຸດເທິງແຜ່ນດິນໂລກ, ເປັນຊີວິດປະເພດທີ່ມະນຸດປາຖະໜາ ເຊິ່ງເປັນປະເພດທີ່ມະນຸດບໍ່ເຄີຍໄດ້ຮັບໃນປະຫວັດສາດຂອງໂລກ. ມັນເປັນຜົນໄດ້ຮັບສຸດທ້າຍຂອງ 6.000 ປີຂອງພາລະກິດແຫ່ງການຄຸ້ມຄອງ, ມັນເປັນສິ່ງທີ່ມະນຸດຊາດປາຖະໜາຫຼາຍທີ່ສຸດ ແລະ ມັນຍັງເປັນຄຳສັນຍາທີ່ພຣະເຈົ້າມີໃຫ້ມະນຸດ. ແຕ່ຄຳສັນຍານີ້ບໍ່ສາມາດບັງເກີດຂຶ້ນໃນທັນທີ; ມະນຸດຈະເຂົ້າສູ່ປາຍທາງໃນອະນາຄົດພຽງແຕ່ເມື່ອພາລະກິດແຫ່ງຍຸກສຸດທ້າຍໄດ້ຖືກເຮັດໃຫ້ສຳເລັດ ແລະ ເຂົາຖືກເອົາຊະນະຢ່າງສົມບູນ ນັ້ນກໍຄື ເມື່ອຊາຕານໄດ້ຖືກເຮັດໃຫ້ພ່າຍແພ້ຢ່າງສິ້ນເຊີງ. ມະນຸດຈະປາສະຈາກທຳມະຊາດແຫ່ງຄວາມຜິດບາບຫຼັງຈາກທີ່ເຂົາຖືກຫຼໍ່ຫຼອມ ເພາະພຣະເຈົ້າຈະໄດ້ເຮັດໃຫ້ຊາຕານພ່າຍແພ້ ເຊິ່ງໝາຍຄວາມວ່າ ຈະບໍ່ມີການບຸກລຸກໂດຍກອງກຳລັງຮຸນແຮງ ແລະ ບໍ່ມີກອງກຳລັງຮຸນແຮງໃດທີ່ສາມາດໂຈມຕີເນື້ອໜັງຂອງມະນຸດໄດ້. ດ້ວຍເຫດນັ້ນ ມະນຸດຈະເປັນອິດສະຫຼະ ແລະ ບໍລິສຸດ ນັ້ນກໍຄື ເຂົາຈະເຂົ້າສູ່ຄວາມເປັນນິລັນດອນ. ມີພຽງເມື່ອກອງກຳລັງທີ່ຮຸນແຮງແຫ່ງຄວາມມືດຖືກຈັບມັດໄວ້ ມະນຸດຈຶ່ງຈະເປັນອິດສະຫຼະໃນທຸກບ່ອນທີ່ເຂົາໄປ

ແລະ ດັ່ງນັ້ນເຂົາກໍຈະປາສະຈາກຄວາມກະບົດ ຫຼື ການຕໍ່ຕ້ານ. ຊາຕານຕ້ອງຖືກຈັບມັດໄວ້ ແລະ ມະນຸດທຸກຄົນກໍຈະປອດໄພ; ສະຖານະການໃນປັດຈຸບັນເກີດຂຶ້ນກໍຍ້ອນ ຊາຕານຍັງກໍ່ໃຫ້ເກີດບັນຫາ ໃນທຸກໆບ່ອນເທິງແຜ່ນດິນໂລກ ແລະ ຍ້ອນພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າທັງໝົດຍັງບໍ່ ໄດ້ມາເຖິງຈຸດສິ້ນສຸດ. ເມື່ອຊາຕານຖືກເຮັດໃຫ້ພ່າຍແພ້ ມະນຸດຈະໄດ້ຮັບອິດສະຫຼະຢ່າງສົມບູນ, ເມື່ອ ມະນຸດຮັບພຣະເຈົ້າ ແລະ ອອກມາຈາກໃຕ້ອຳນາດຂອງຊາຕານ ເຂົາຈະເຫັນດວງຕາເວັນແຫ່ງຄວາມ ຊອບທຳ. ຊີວິດທີ່ເໝາະສົມກັບມະນຸດປົກກະຕິຈະຖືກຮັບອີກຄັ້ງ, ທຸກສິ່ງທີ່ມະນຸດປົກກະຕິຄວນມີ ເຊັ່ນ: ຄວາມສາມາດໃນການສັງເກດຄວາມດີຈາກຄວາມຊົ່ວ, ຄວາມເຂົ້າໃຈວິທີການກິນ ແລະ ປົກຄຸມຕົວເອງ ແລະ ຄວາມສາມາດໃນການດຳລົງຊີວິດໂດຍປົກກະຕິ ເຊິ່ງສິ່ງທັງໝົດນີ້ຈະຖືກຮັບຄືນ ອີກຄັ້ງ. ເຖິງແມ່ນວ່າ ເອວາບໍ່ໄດ້ຖືກງູລໍ້ລວງ ມະນຸດກໍຄວນມີຊີວິດທີ່ປົກກະຕິແບບນີ້ຫຼັງຈາກທີ່ເຂົາ ຖືກສ້າງໃນຕອນເລີ່ມຕົ້ນ. ເຂົາຄວນໄດ້ກິນ, ໄດ້ຖືກປົກຄຸມ ແລະ ໄດ້ນຳໃຊ້ຊີວິດແບບມະນຸດປົກກະຕິ ທີ່ຢູ່ເທິງແຜ່ນດິນໂລກ. ແຕ່ຫຼັງຈາກທີ່ມະນຸດໄດ້ກາຍມາເປັນຄົນຊົ່ວຊ້າ ຊີວິດນີ້ກໍກາຍມາເປັນຄວາມ ຝັນລົມໆແລ້ງໆ ແລະ ຍິ່ງໄປກວ່ານັ້ນໃນປັດຈຸບັນ ມະນຸດບໍ່ກ້າທີ່ຈະຈິນຕະນາການເຖິງສິ່ງດັ່ງກ່າວ. ຕາມຄວາມຈິງແລ້ວ ຊີວິດທີ່ສວຍງາມທີ່ມະນຸດປາຖະໜານີ້ແມ່ນສິ່ງຈຳເປັນ. ຖ້າວ່າມະນຸດປາສະຈາກ ປາຍທາງດັ່ງກ່າວ ແລ້ວຊີວິດທີ່ຊົ່ວຊ້າຂອງເຂົາເທິງແຜ່ນດິນໂລກກໍຈະບໍ່ຈົບສິ້ນຈັກເທື່ອ ແລະ ຖ້າບໍ່ມີ ຊີວິດທີ່ສວຍງາມດັ່ງກ່າວ ແລ້ວກໍຈະບໍ່ມີຕອນຈົບໃຫ້ກັບໂຊກຊາຕາຂອງຊາຕານ ຫຼື ໃຫ້ກັບຍຸກທີ່ ຊາຕານມີອຳນາດເທິງແຜ່ນດິນໂລກ. ມະນຸດຕ້ອງມາເຖິງອານາຈັກທີ່ກອງກຳລັງແຫ່ງຄວາມມືດບໍ່ ສາມາດເຂົ້າເຖິງໄດ້ ແລະ ເມື່ອເຂົາມາເຖິງແລ້ວ ສິ່ງນີ້ຈະພິສູດໃຫ້ເຫັນວ່າ ຊາຕານພ່າຍແພ້ແລ້ວ. ດ້ວຍ ວິທີນີ້ ເມື່ອບໍ່ມີການລົບກວນຈາກຊາຕານ ພຣະເຈົ້າເອງຈະຄວບຄຸມມະນຸດຊາດ ແລະ ພຣະອົງຈະສັ່ງ ແລະ ຄວບຄຸມຊີວິດທັງໝົດຂອງມະນຸດ; ພຽງແຕ່ສິ່ງນີ້ເທົ່ານັ້ນຈຶ່ງຈະຖືວ່າເປັນຄວາມພ່າຍແພ້ຂອງ ຊາຕານ. ສ່ວນຫຼາຍຊີວິດຂອງມະນຸດໃນປັດຈຸບັນເປັນຊີວິດແຫ່ງຄວາມສົກກະປົກ; ມັນຍັງເປັນຊີວິດ ແຫ່ງຄວາມເຈັບປວດ ແລະ ຄວາມທຸກທໍລະມານ. ສິ່ງນີ້ບໍ່ສາມາດຖືກເອີ້ນວ່າ ຄວາມພ່າຍແພ້ຂອງ ຊາຕານ, ມະນຸດຍັງບໍ່ໄດ້ຫຼົບໜີຈາກທະເລແຫ່ງຄວາມທຸກທໍລະມານ, ຍັງບໍ່ໄດ້ຫຼົບໜີຈາກຄວາມລຳບາກ ໃນຊີວິດຂອງມະນຸດ ຫຼື ອິດທິພົນຂອງຊາຕານ ແລະ ເຂົາຍັງຈະມີພຽງຄວາມຮູ້ທີ່ໜ້ອຍຫຼາຍແທ້ໆ ກ່ຽວກັບພຣະເຈົ້າ. ຄວາມລຳບາກທຸກຢ່າງຂອງມະນຸດຖືກສ້າງໂດຍຊາຕານ, ມັນແມ່ນຊາຕານທີ່ນຳ ຄວາມເຈັບປວດມາສູ່ຊີວິດຂອງມະນຸດ ແລະ ພຽງແຕ່ຫຼັງຈາກທີ່ຊາຕານຖືກຜູກມັດ ມະນຸດຈຶ່ງຈະ ສາມາດຫຼົບໜີຈາກທະເລແຫ່ງຄວາມທຸກທໍລະມານ. ຢ່າງໃດກໍຕາມ ການຜູກມັດຂອງຊາຕານແມ່ນ ຖືກບັນລຸຜ່ານການເອົາຊະນະ ແລະ ການຮັບຫົວໃຈຂອງມະນຸດ ໂດຍເຮັດໃຫ້ມະນຸດເປັນສິ່ງທີ່ຍາດ ເອົາມາໄດ້ຈາກສົງຄາມກັບຊາຕານ.

ໃນປັດຈຸບັນ ການທີ່ມະນຸດສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ແລະ ການຖືກເຮັດໃຫ້ ສົມບູນແມ່ນສິ່ງທີ່ໄດ້ສະແຫວງຫາກ່ອນໜ້າທີ່ເຂົາຈະມີຊີວິດແບບມະນຸດປົກກະຕິທີ່ຢູ່ເທິງແຜ່ນດິນ ໂລກ ແລະ ພວກມັນເປັນຈຸດປະສົງທີ່ມະນຸດສະແຫວງຫາກ່ອນທີ່ຈະຕົກເປັນທາດຂອງຊາຕານ. ໃນ

ແກ່ນແທ້ນັ້ນ ການທີ່ມະນຸດສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ແລະ ການຖືກເຮັດໃຫ້ສົມບູນ ຫຼື ການຖືກນຳໃຊ້ໃຫ້ເກີດຜົນໃຫຍ່ຫຼວງ ກໍແມ່ນການຫຼົບໜີຈາກອິດທິພົນຂອງຊາຕານ; ການສະແຫວງຫາຂອງມະນຸດກໍແມ່ນເພື່ອກາຍເປັນຜູ້ຊະນະ ແຕ່ຜົນໄດ້ຮັບສຸດທ້າຍນັ້ນຈະເປັນການທີ່ເຂົາຫຼົບໜີຈາກອິດທິພົນຂອງຊາຕານ. ມີພຽງແຕ່ການຫຼົບໜີຈາກອິດທິພົນຂອງຊາຕານເທົ່ານັ້ນທີ່ມະນຸດສາມາດໃຊ້ຊີວິດແບບມະນຸດປົກກະຕິທີ່ຢູ່ເທິງແຜ່ນດິນໂລກ ເຊິ່ງເປັນຊີວິດແຫ່ງການນະມັດສະການພຣະເຈົ້າ. ໃນປັດຈຸບັນ ການທີ່ມະນຸດສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ແລະ ການຖືກເຮັດໃຫ້ສົມບູນແມ່ນສິ່ງທີ່ໄດ້ສະແຫວງຫາກ່ອນທີ່ຈະມີຊີວິດແບບຄົນປົກກະຕິທີ່ຢູ່ເທິງແຜ່ນດິນໂລກ. ໂດຍສິ່ງເຫຼົ່ານັ້ນຖືກສະແຫວງຫາຫຼັກໆກໍເພື່ອຜົນປະໂຫຍດແຫ່ງການຖືກຊຳລະ ແລະ ການນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ເພື່ອທີ່ຈະນະມັດສະການພຣະຜູ້ສ້າງ. ຖ້າມະນຸດມີຊີວິດແບບຄົນປົກກະຕິທີ່ຢູ່ເທິງແຜ່ນດິນໂລກ ເຊິ່ງເປັນຊີວິດທີ່ປາສະຈາກຄວາມລຳບາກ ຫຼື ການທຸກທໍລະມານ ແລ້ວມະນຸດຈະບໍ່ເຂົ້າຮ່ວມໃນການສະແຫວງຫາເພື່ອກາຍມາເປັນຜູ້ຊະນະ. "ການກາຍມາເປັນຜູ້ຊະນະ" ແລະ "ການຖືກເຮັດໃຫ້ສົມບູນ" ແມ່ນຈຸດປະສົງທີ່ພຣະອົງມອບໃຫ້ມະນຸດສະແຫວງຫາ ແລະ ຜ່ານການສະແຫວງຫາໂດຍມີຈຸດປະສົງເຫຼົ່ານີ້ ພຣະອົງເຮັດໃຫ້ມະນຸດນຳຄວາມຈິງເຂົ້າສູ່ການປະຕິບັດ ແລະ ດຳລົງຊີວິດຢ່າງມີຄວາມໝາຍ. ຈຸດປະສົງແມ່ນເພື່ອເຮັດໃຫ້ມະນຸດສົມບູນ ແລະ ເພື່ອຮັບເຂົາ ແລະ ການສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ແລະ ການຖືກເຮັດໃຫ້ສົມບູນເປັນພຽງແຕ່ວິທີທາງ. ໃນອະນາຄົດ ຖ້າມະນຸດເຂົ້າສູ່ປາຍທາງທີ່ມະຫັດສະຈັນ ຈະບໍ່ມີການອ້າງເຖິງການກາຍມາເປັນຜູ້ຊະນະ ແລະ ການຖືກເຮັດໃຫ້ສົມບູນອີກຕໍ່ໄປ; ຈະມີພຽງແຕ່ສິ່ງຖືກສ້າງແຕ່ລະຢ່າງປະຕິບັດໜ້າທີ່ຂອງພວກເຂົາ. ໃນປັດຈຸບັນ ມະນຸດຖືກສ້າງໃຫ້ສະແຫວງຫາສິ່ງເຫຼົ່ານີ້ພຽງແຕ່ເພື່ອຈຳກັດຂອບເຂດໃຫ້ກັບມະນຸດ ເພື່ອການສະແຫວງຫາຂອງມະນຸດຈະມີເປົ້າໝາຍ ແລະ ປະຕິບັດໄດ້ຫຼາຍຍິ່ງຂຶ້ນ. ຫາກປາສະຈາກສິ່ງນັ້ນ ມະນຸດກໍຈະດຳລົງຊີວິດຢູ່ທ່າມກາງສິ່ງວ່າງເປົ່າທີ່ເປັນພຽງນາມມະທຳ ແລະ ສະແຫວງຫາທາງເຂົ້າສູ່ຊີວິດຊົ່ວນິລັນດອນ ແລະ ຖ້າເປັນແບບນີ້ ມະນຸດຈະບໍ່ໜ້າສັງເວດຫຼາຍຍິ່ງຂຶ້ນບໍ? ການສະແຫວງຫາດ້ວຍວິທີນີ້ເຊິ່ງປາສະຈາກເປົ້າໝາຍ ຫຼື ຫຼັກການ ບໍ່ແມ່ນການຫຼອກລວງຕົນເອງບໍ? ໃນທີ່ສຸດແລ້ວ ການສະແຫວງແບບນີ້ກໍຈະບໍ່ເກີດຜົນຕາມທຳມະຊາດເລີຍ; ໃນສຸດທ້າຍ ມະນຸດຈະຍັງດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ ແລະ ບໍ່ສາມາດເຮັດໃຫ້ຕົນເອງຫຼຸດອອກຈາກສິ່ງນັ້ນໄດ້. ເປັນຫຍັງຈຶ່ງຕ້ອງນຳຕົວເຂົາເອງມາຢູ່ພາຍໃຕ້ການສະແຫວງຫາທີ່ບໍ່ມີເປົ້າໝາຍດັ່ງກ່າວ? ເມື່ອມະນຸດເຂົ້າສູ່ປາຍທາງນິດນິລັນ ມະນຸດຈະນະມັດສະການພຣະຜູ້ສ້າງ ແລະ ຍ້ອນມະນຸດໄດ້ຮັບຄວາມລອດພົ້ນ ແລະ ເຂົ້າສູ່ຄວາມເປັນນິດນິລັນ ມະນຸດຈຶ່ງຈະບໍ່ສະແຫວງຫາຈຸດປະສົງໃດອີກ ຫຼື ຍິ່ງໄປກວ່ານັ້ນກໍຄື ເຂົາຈະບໍ່ຕ້ອງກັງວົນວ່າ ເຂົາຖືກອ້ອມລ້ອມດ້ວຍຊາຕານ. ໃນເວລານີ້ ມະນຸດຈະຮູ້ຈັກທີ່ຂອງເຂົາ ແລະ ຈະປະຕິບັດໜ້າທີ່ຂອງເຂົາ ແລະ ເຖິງແມ່ນວ່າ ພວກເຂົາບໍ່ໄດ້ຖືກຕີສອນ ຫຼື ພິພາກສາ, ແຕ່ລະຄົນກໍຈະປະຕິບັດໜ້າທີ່ຂອງພວກເຂົາ. ໃນເວລານັ້ນ ມະນຸດຈະເປັນສິ່ງຖືກສ້າງທັງໃນຕົວຕົນ ແລະ ໃນສະຖານະ. ຈະບໍ່ມີການຈຳແນກວ່າສູງ ແລະ ຕໍ່າອີກຕໍ່ໄປ; ແຕ່ລະຄົນຈະພຽງແຕ່ປະຕິບັດໜ້າທີ່ທີ່

ແຕກຕ່າງກັນ. ຢ່າງໃດກໍຕາມ ມະນຸດຈະຍັງດຳລົງຊີວິດໃນປາຍທາງຂອງມະນຸດຊາດທີ່ເປັນລະບຽບ ແລະ ເໝາະສົມສຳລັບມະນຸດຊາດ, ມະນຸດຈະປະຕິບັດໜ້າທີ່ຂອງເຂົາເພື່ອຜົນປະໂຫຍດແຫ່ງການນະມັດສະການພຣະຜູ້ສ້າງ ແລະ ມະນຸດຊາດປະເພດນີ້ຈະເປັນມະນຸດຊາດຕະຫຼອດໄປເປັນນິດ. ໃນເວລານັ້ນ ມະນຸດຈະໄດ້ຮັບຊີວິດທີ່ເຍືອງທາງໂດຍພຣະເຈົ້າ, ເປັນຊີວິດທີ່ຢູ່ພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະເຈົ້າ ແລະ ເປັນຊີວິດທີ່ຮ່ວມກັນກັບພຣະເຈົ້າ. ມະນຸດຊາດຈະໃຊ້ຊີວິດປົກກະຕິທີ່ຢູ່ເທິງແຜ່ນດິນໂລກ ແລະ ບັນດາມະນຸດຊາດຈະເຂົ້າສູ່ເສັ້ນທາງທີ່ຖືກຕ້ອງ. ແຜນການຄຸ້ມຄອງ 6.000 ປີຈະເຮັດໃຫ້ຊາຕານພ່າຍແພ້ໄປໃນທີ່ສຸດ ເຊິ່ງໝາຍຄວາມວ່າ ພຣະເຈົ້າຈະເອົາຄືນລັກສະນະດັ່ງເດີມຂອງມະນຸດຫຼັງຈາກທີ່ສ້າງເຂົາຂຶ້ນມາ ແລະ ດ້ວຍເຫດນັ້ນ ຄວາມປະສົງດັ່ງເດີມຂອງພຣະເຈົ້າຈະຖືກເຮັດໃຫ້ສຳເລັດ. ໃນຕອນເລີ່ມຕົ້ນ ກ່ອນທີ່ມະນຸດຊາດຈະຖືກຊາຕານເຮັດໃຫ້ເສື່ອມຊາມ ມະນຸດຊາດໄດ້ໃຊ້ຊີວິດປົກກະຕິທີ່ຢູ່ເທິງແຜ່ນດິນໂລກ. ຕໍ່ມາ ເມື່ອເຂົາຖືກຊາຕານເຮັດໃຫ້ເສື່ອມຊາມ ມະນຸດແມ່ນໄດ້ສູນເສຍຊີວິດປົກກະຕິນີ້ໄປ ແລະ ດ້ວຍເຫດນັ້ນ ຈຶ່ງເລີ່ມມີພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ ແລະ ມີສົງຄາມກັບຊາຕານເພື່ອເອົາຄືນຊີວິດປົກກະຕິຂອງມະນຸດ. ມີພຽງແຕ່ເມື່ອພາລະກິດ 6.000 ປີແຫ່ງການຄຸ້ມຄອງຂອງພຣະເຈົ້າມາເຖິງຈຸດສຸດທ້າຍ ຊີວິດຂອງບັນດາມວນມະນຸດຊາດຈຶ່ງຈະເລີ່ມຕົ້ນຢ່າງເປັນທາງການເທິງແຜ່ນດິນໂລກ, ມີພຽງແຕ່ຕອນນັ້ນ ມະນຸດຈຶ່ງຈະມີຊີວິດທີ່ມະຫັດສະຈັນ ແລະ ພຣະເຈົ້າຈຶ່ງຈະຟື້ນຄືນເປົ້າໝາຍແຫ່ງການສ້າງມະນຸດທີ່ຢູ່ໃນຕອນເລີ່ມຕົ້ນພ້ອມທັງລັກສະນະດັ່ງເດີມຂອງມະນຸດອີກດ້ວຍ. ດ້ວຍເຫດນັ້ນ ເມື່ອມະນຸດມີຊີວິດປົກກະຕິຂອງມະນຸດຊາດເທິງແຜ່ນດິນໂລກ ມະນຸດຈະບໍ່ສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ຫຼື ເພື່ອຖືກເຮັດໃຫ້ສົມບູນ ຍ້ອນມະນຸດຈະເປັນຄົນທີ່ບໍລິສຸດ. "ຜູ້ຊະນະ" ແລະ "ຖືກເຮັດໃຫ້ສົມບູນ" ທີ່ມະນຸດກ່າວເຖິງແມ່ນຈຸດປະສົງທີ່ມອບໃຫ້ມະນຸດສະແຫວງຫາໃນສົງຄາມລະຫວ່າງພຣະເຈົ້າ ແລະ ຊາຕານ ແລະ ພວກມັນມີຢູ່ກໍພຽງແຕ່ຍ້ອນມະນຸດຖືກເຮັດໃຫ້ເສື່ອມຊາມ. ໂດຍການມອບຈຸດປະສົງໃຫ້ເຈົ້າ ແລະ ການເຮັດໃຫ້ເຈົ້າສະແຫວງຫາຈຸດປະສົງນີ້ທີ່ຈະເຮັດໃຫ້ຊາຕານພ່າຍແພ້. ການຂໍໃຫ້ເຈົ້າເປັນຜູ້ຊະນະ ຫຼື ຖືກເຮັດໃຫ້ສົມບູນ ຫຼື ຖືກນຳໃຊ້ກໍຮຽກຮ້ອງໃຫ້ເຈົ້າເປັນພະຍານເພື່ອເຮັດໃຫ້ຊາຕານອັບອາຍ. ໃນສຸດທ້າຍແລ້ວ ມະນຸດຈະໃຊ້ຊີວິດແບບມະນຸດປົກກະຕິທີ່ຢູ່ເທິງແຜ່ນດິນໂລກ ແລະ ມະນຸດຈະເປັນຄົນທີ່ບໍລິສຸດ; ເມື່ອສິ່ງນີ້ເກີດຂຶ້ນ ພວກເຂົາຈະຍັງສະແຫວງຫາເພື່ອກາຍມາເປັນຜູ້ຊະນະອີກບໍ? ພວກເຂົາທັງໝົດບໍ່ແມ່ນສິ່ງຖືກສ້າງບໍ? ເວົ້າເຖິງການເປັນຜູ້ຊະນະ ແລະ ການເປັນຄົນທີ່ສົມບູນ, ຄຳສັບເຫຼົ່ານີ້ແມ່ນແນໃສ່ຊາຕານ ແລະ ຄວາມສົກກະປົກຂອງມະນຸດ. ຄຳວ່າ "ຜູ້ຊະນະ" ໃນທີ່ນີ້ບໍ່ໄດ້ອ້າງເຖິງໄຊຊະນະເໜືອຊາຕານ ແລະ ກອງກຳລັງທີ່ຮຸນແຮງບໍ? ເມື່ອເຈົ້າເວົ້າວ່າ ເຈົ້າຖືກເຮັດໃຫ້ສົມບູນ, ແມ່ນຫຍັງໃນຕົວເຈົ້າທີ່ຖືກເຮັດໃຫ້ສົມບູນ? ມັນບໍ່ແມ່ນວ່າ ເຈົ້າໄດ້ຖອນຕົວເຈົ້າເອງອອກຈາກອຸປະນິໄສຊົ່ວຮ້າຍທີ່ເສື່ອມຊາມແລ້ວບໍ ເພື່ອເຈົ້າຈະສາມາດບັນລຸການຮັກພຣະເຈົ້າຢ່າງທີ່ສຸດ? ສິ່ງດັ່ງກ່າວຖືກກ່າວຂຶ້ນໂດຍກ່ຽວພັນກັບສິ່ງທີ່ສົກກະປົກພາຍໃນມະນຸດ ແລະ ໂດຍກ່ຽວພັນກັບຊາຕານ; ພວກມັນບໍ່ໄດ້ຖືກກ່າວຂຶ້ນໂດຍກ່ຽວພັນກັບພຣະເຈົ້າ.

ໃນປັດຈຸບັນ ຖ້າເຈົ້າບໍ່ສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ແລະ ຖືກເຮັດໃຫ້ສົມບູນ ແລ້ວໃນອະນາຄົດ ເມື່ອມະນຸດຊາດໃຊ້ຊີວິດປົກກະຕິເທິງແຜ່ນດິນໂລກ ກໍຈະບໍ່ມີໂອກາດໃຫ້ການສະແຫວງຫາດັ່ງກ່າວອີກແລ້ວ. ໃນເວລານັ້ນ ເວລາສຸດທ້າຍຂອງຄົນທຸກປະເພດຈະຖືກເປີດເຜີຍອອກ. ໃນເວລານັ້ນ ມັນຈະຊັດເຈນວ່າ ເຈົ້າເປັນຄົນປະເພດໃດ ແລະ ຖ້າເຈົ້າປາຖະໜາທີ່ຈະເປັນຜູ້ຊະນະ ຫຼື ປາຖະໜາທີ່ຈະຖືກເຮັດໃຫ້ສົມບູນ ມັນກໍຈະເປັນໄປບໍ່ໄດ້. ມັນກໍພຽງແຕ່ວ່າ ຍ້ອນຄວາມກະບົດຂອງເຂົາ ມະນຸດຈະຖືກລົງໂທດຫຼັງຈາກທີ່ຖືກເປີດເຜີຍ. ໃນເວລານັ້ນ ການສະແຫວງຫາຂອງມະນຸດຈະບໍ່ໄດ້ຢູ່ໃນຕຳແໜ່ງທີ່ສູງກວ່າສິ່ງອື່ນ ສຳລັບບາງຄົນກໍເປັນຜູ້ຊະນະ ແລະ ຄົນອື່ນກໍຖືກເຮັດໃຫ້ສົມບູນ ຫຼື ສຳລັບບາງຄົນກໍເປັນບຸດຜູ້ກົກຂອງພຣະເຈົ້າ ແລະ ຄົນອື່ນກໍເປັນບຸດຂອງພຣະເຈົ້າ; ພວກເຂົາຈະບໍ່ສະແຫວງຫາສິ່ງເຫຼົ່ານີ້. ທຸກສິ່ງຈະເປັນສິ່ງຖືກສ້າງຂອງພຣະເຈົ້າ, ທຸກສິ່ງຈະດຳລົງຢູ່ເທິງແຜ່ນດິນໂລກ ແລະ ທຸກຢ່າງຈະດຳລົງຊີວິດຢູ່ຮ່ວມກັນກັບພຣະເຈົ້າເທິງແຜ່ນດິນໂລກ. ບັດນີ້ແມ່ນເວລາແຫ່ງສົງຄາມລະຫວ່າງພຣະເຈົ້າ ແລະ ຊາຕານ, ມັນເປັນເວລາທີ່ສົງຄາມນີ້ຍັງບໍ່ໄດ້ສິ້ນສຸດລົງເທື່ອ ເຊິ່ງເປັນເວລາທີ່ມະນຸດຍັງບໍ່ໄດ້ຖືກຮັບຢ່າງສົມບູນ; ມັນເປັນໄລຍະເວລາແຫ່ງການປ່ຽນສະພາບ. ດ້ວຍເຫດນັ້ນ ມະນຸດຈຳເປັນຕ້ອງສະແຫວງຫາເພື່ອກາຍມາເປັນຜູ້ຊະນະ ຫຼື ໜຶ່ງໃນຄົນຂອງພຣະເຈົ້າ. ໃນປັດຈຸບັນ ມີຄວາມແຕກຕ່າງໃນສະຖານະ ແຕ່ເມື່ອເວລານັ້ນມາຮອດ ຈະບໍ່ມີຄວາມແຕກຕ່າງໃດເລີຍ; ສະຖານະຂອງທຸກຄົນທີ່ມີໄຊຊະນະຈະຄືກັນໝົດ, ພວກເຂົາຈະເປັນສະມາຊິກຂອງມະນຸດຊາດທີ່ມີຄຸນສົມບັດທັງໝົດ ແລະ ຈະດຳລົງຊີວິດຢ່າງເທົ່າທຽມກັນເທິງແຜ່ນດິນໂລກ ເຊິ່ງໝາຍຄວາມວ່າ ພວກເຂົາຈະເປັນສິ່ງຖືກສ້າງທີ່ມີຄຸນສົມບັດ ແລະ ສິ່ງທີ່ພວກເຂົາໄດ້ຮັບກໍຈະຄືກັນທັງໝົດ. ຍ້ອນຍຸກແຫ່ງພາລະກິດຂອງພຣະເຈົ້າແຕກຕ່າງກັນ ແລະ ຈຸດປະສົງຂອງພາລະກິດຂອງພຣະອົງກໍແຕກຕ່າງເຊັ່ນກັນ, ຖ້າພາລະກິດນີ້ຖືກເຮັດໃຫ້ສຳເລັດໃນພວກເຈົ້າ, ພວກເຈົ້າກໍມີສິດຖືກເຮັດໃຫ້ສົມບູນ ແລະ ກາຍມາເປັນຜູ້ຊະນະ; ຖ້າພາລະກິດນີ້ຖືກເຮັດໃຫ້ສຳເລັດໃນຕ່າງແດນ ແລ້ວຜູ້ຄົນຢູ່ທີ່ນັ້ນກໍມີສິດທີ່ຈະກາຍມາເປັນຜູ້ຄົນກຸ່ມທຳອິດທີ່ຈະຖືກເອົາຊະນະ ແລະ ຜູ້ຄົນກຸ່ມທຳອິດທີ່ຈະຖືກເຮັດໃຫ້ສົມບູນ. ໃນປັດຈຸບັນ ພາລະກິດນີ້ບໍ່ໄດ້ຖືກເຮັດໃຫ້ສຳເລັດໃນຕ່າງແດນ ສະນັ້ນ ຜູ້ຄົນໃນປະເທດອື່ນກໍບໍ່ມີສິດທີ່ຈະຖືກເຮັດໃຫ້ສົມບູນ ແລະ ກາຍມາເປັນຜູ້ຊະນະ ແລະ ມັນເປັນໄປບໍ່ໄດ້ເລີຍສຳລັບພວກເຂົາທີ່ຈະກາຍມາເປັນກຸ່ມທຳອິດ. ຍ້ອນຈຸດປະສົງຂອງພາລະກິດຂອງພຣະເຈົ້າແຕກຕ່າງກັນ, ຍຸກແຫ່ງພາລະກິດຂອງພຣະເຈົ້າກໍແຕກຕ່າງກັນ ແລະ ຂອບເຂດຂອງພາລະກິດນັ້ນກໍແຕກຕ່າງກັນ ສະນັ້ນຈຶ່ງມີກຸ່ມທຳອິດ ນັ້ນກໍຄື ມີຜູ້ຊະນະ ແລະ ດ້ວຍເຫດນັ້ນກໍຈະມີກຸ່ມທີສອງທີ່ຖືກເຮັດໃຫ້ສົມບູນເຊັ່ນດຽວກັນ. ເມື່ອມີກຸ່ມທຳອິດທີ່ຖືກເຮັດໃຫ້ສົມບູນ ກໍຈະມີຕົວຢ່າງ ແລະ ແບບຢ່າງ ແລະ ດ້ວຍເຫດນັ້ນ ໃນອະນາຄົດຈຶ່ງຈະມີກຸ່ມຄົນທີສອງ ແລະ ທີສາມທີ່ຈະຖືກເຮັດໃຫ້ສົມບູນ ແຕ່ໃນຄວາມເປັນນິດນິລັນ ພວກເຂົາທັງໝົດກໍຈະເປັນຄືກັນ ແລະ ຈະບໍ່ມີການຈັດສະຖານະເປັນແຕ່ລະປະເພດ. ພວກເຂົາພຽງແຕ່ຈະຖືກເຮັດໃຫ້ສົມບູນໃນເວລາທີ່ແຕກຕ່າງກັນ ແລະ ຈະບໍ່ມີຄວາມແຕກຕ່າງໃນສະຖານະ. ເມື່ອຮອດເວລາທີ່ທຸກຄົນຈະຖືກເຮັດໃຫ້ສົມບູນ ແລະ ທີ່ພາລະກິດແຫ່ງຈັກກະວານທັງໝົດຈະສິ້ນສຸດລົງ ຈະບໍ່ມີຄວາມແຕກຕ່າງໃນສະຖານະ

ແລະ ທຸກສິ່ງຈະມີສະຖານະເທົ່າທຽມກັນ. ໃນປັດຈຸບັນ ພາລະກິດນີ້ຖືກປະຕິບັດທ່າມກາງພວກເຈົ້າ ເພື່ອພວກເຈົ້າຈະໄດ້ກາຍມາເປັນຜູ້ຊະນະ. ຖ້າມັນຖືກປະຕິບັດໃນປະເທດອັງກິດ ແລ້ວປະເທດອັງກິດກໍຈະເປັນກຸ່ມທຳອິດ, ເຊັ່ນດຽວກັນ ພວກເຈົ້າກໍຈະເປັນກຸ່ມທຳອິດ. ມັນເປັນພຽງແຕ່ວ່າ ພວກເຈົ້າໄດ້ຮັບພອນຢ່າງພິເສດພ້ອມດ້ວຍພຣະຄຸນໃນທຳນອງທີ່ພາລະກິດກຳລັງດຳເນີນໃນຕົວພວກເຈົ້າໃນປັດຈຸບັນ ແລະ ຖ້າພາລະກິດນີ້ບໍ່ໄດ້ປະຕິບັດໃນພວກເຈົ້າ ແລ້ວພວກເຈົ້າກໍຈະເປັນກຸ່ມທີສອງ ຫຼື ທີສາມ ຫຼື ທີສີ່ ຫຼື ທີຫ້າ. ນີ້ເປັນພຽງຍ້ອນຄວາມແຕກຕ່າງໃນລະດັບຂອງພາລະກິດ; ກຸ່ມທຳອິດ ແລະ ກຸ່ມທີສອງບໍ່ໄດ້ໝາຍເຖິງວ່າ ກຸ່ມໜຶ່ງສູງກວ່າ ຫຼື ຕໍ່າກວ່າອີກກຸ່ມໜຶ່ງ, ມັນພຽງແຕ່ໝາຍເຖິງລະດັບທີ່ຄົນເຫຼົ່ານີ້ຖືກເຮັດໃຫ້ສົມບູນ. ໃນປັດຈຸບັນ ພຣະທຳເຫຼົ່ານີ້ຖືກສື່ສານໃຫ້ກັບພວກເຈົ້າ ແຕ່ເປັນຫຍັງພວກເຈົ້າຈຶ່ງບໍ່ຮັບຮູ້ກ່ອນໜ້ານີ້? ຍ້ອນວ່າ ຫາກປາສະຈາກຂະບວນການ ຜູ້ຄົນມັກຈະເຮັດເກີນປົກກະຕິ. ຕົວຢ່າງເຊັ່ນ: ພຣະເຢຊູກ່າວໃນເວລາຂອງພຣະອົງວ່າ: “ເມື່ອເຮົາຈາກໄປ ດ້ວຍເຫດນັ້ນເຮົາກໍຈະມາເຖິງ”. ໃນປັດຈຸບັນ ຫຼາຍຄົນຫຼົງໄຫຼໃນພຣະທຳເຫຼົ່ານີ້ ແລະ ພວກເຂົາຕ້ອງການພຽງແຕ່ນຸ່ງເສື້ອຄຸມສີຂາວ ແລະ ລໍຖ້າໃຫ້ຖືກຍົກຂຶ້ນເມືອສະຫວັນ. ດ້ວຍເຫດນັ້ນ ມີພຣະທຳຫຼາຍຂໍ້ທີ່ບໍ່ສາມາດກ່າວກ່ອນເວລາກຳນົດ; ຖ້າພຣະທຳເຫຼົ່ານັ້ນຖືກກ່າວກ່ອນເວລາກຳນົດ ມະນຸດກໍຈະເຮັດເກີນປົກກະຕິ. ວຸດທິພາວະຂອງມະນຸດນ້ອຍເກີນໄປ ແລະ ພວກເຂົາບໍ່ສາມາດເບິ່ງຜ່ານໄປເຖິງຄວາມຈິງຂອງພຣະທຳເຫຼົ່ານີ້.

ເມື່ອມະນຸດບັນລຸຊີວິດທີ່ແທ້ຈິງຂອງມະນຸດເທິງແຜ່ນດິນໂລກ ແລະ ກອງກຳລັງທັງໝົດຂອງຊາຕານຕົກຢູ່ໃນການເປັນທາດ ມະນຸດຈະດຳລົງຊີວິດເທິງແຜ່ນດິນໂລກຢ່າງງ່າຍດາຍ. ສິ່ງຕ່າງໆຈະບໍ່ຊັບຊ້ອນຄືກັບທີ່ພວກມັນເປັນຢູ່ໃນປັດຈຸບັນ ເຊັ່ນ: ຄວາມສຳພັນຂອງມະນຸດ, ການສຳພັນໃນສັງຄົມ, ຄວາມສຳພັນທີ່ຊັບຊ້ອນຂອງຄອບຄົວ... ພວກມັນນຳເອົາຫຼາຍໆບັນຫາມາ ເຊິ່ງເຈັບປວດຫຼາຍ! ຊີວິດຂອງມະນຸດໃນທີ່ນີ້ໂສກເສົ້າຫຼາຍ! ເມື່ອມະນຸດຖືກເອົາຊະນະ ຫົວໃຈ ແລະ ຈິດໃຈຂອງເຂົາຈະປ່ຽນແປງ ນັ້ນກໍຄື ເຂົາຈະມີຫົວໃຈທີ່ເຄົາລົບ ແລະ ຮັກພຣະເຈົ້າ. ເມື່ອທຸກຄົນທີ່ຢູ່ພາຍໃນຈັກກະວານຜູ້ເຊິ່ງສະແຫວງຫາເພື່ອຮັກພຣະເຈົ້າໄດ້ຖືກເອົາຊະນະແລ້ວ ເຊິ່ງເວົ້າໄດ້ວ່າ ເມື່ອຊາຕານຖືກເຮັດໃຫ້ພ່າຍແພ້ ແລະ ເມື່ອຊາຕານພ້ອມກັບກອງກຳລັງແຫ່ງຄວາມມືດທັງໝົດໄດ້ຕົກຢູ່ໃນການເປັນທາດ ແລ້ວຊີວິດຂອງມະນຸດເທິງແຜ່ນດິນໂລກກໍຈະບໍ່ຖືກລົບກວນ ແລະ ເຂົາຈະສາມາດດຳລົງຊີວິດຢູ່ເທິງແຜ່ນດິນໂລກຢ່າງມີອິດສະຫຼະ. ຖ້າຊີວິດຂອງມະນຸດປາສະຈາກຄວາມສຳພັນທາງເນື້ອໜັງ ແລະ ປາສະຈາກຄວາມຊັບຊ້ອນຂອງເນື້ອໜັງ ແລ້ວມັນກໍຈະງ່າຍກວ່າເກົ່າຫຼາຍ. ຄວາມສຳພັນທາງເນື້ອໜັງຂອງມະນຸດຊັບຊ້ອນຫຼາຍ ແລະ ການທີ່ມະນຸດມີສິ່ງດັ່ງກ່າວກໍເປັນເຄື່ອງພິສູດແລ້ວວ່າ ເຂົາຍັງບໍ່ໄດ້ເປັນອິດສະຫຼະຈາກອິດທິພົນຂອງຊາຕານ. ຖ້າເຈົ້າມີຄວາມສຳພັນແບບດຽວກັນກັບອ້າຍເອື້ອຍນ້ອງຂອງເຈົ້າ, ຖ້າເຈົ້າມີຄວາມສຳພັນແບບດຽວກັນກັບສະມາຊິກແຕ່ລະຄົນໃນຄອບຄົວຂອງເຈົ້າ ແລ້ວເຈົ້າກໍຈະບໍ່ມີຄວາມກັງວົນ ແລະ ຈະບໍ່ຈຳເປັນຕ້ອງເປັນຫ່ວງໃຜເລີຍ. ບໍ່ມີສິ່ງໃດທີ່ດີກວ່ານີ້ ແລະ ດ້ວຍວິທີນີ້ ມະນຸດຈະຮັບການບັນເທົາຈາກຄວາມເຈັບປວດເຄິ່ງໜຶ່ງ. ການມີຊີວິດແບບມະນຸດປົກກະຕິເທິງ

ແຜ່ນດິນໂລກ ມະນຸດກໍຈະຄ້າຍຄືກັບທູດສະຫວັນ; ເຖິງແມ່ນຈະຍັງເປັນເນື້ອໜັງຢູ່ ເຂົາຈະຄ້າຍຄືກັບທູດສະຫວັນຫຼາຍ. ນີ້ຄືຄຳສັນຍາສຸດທ້າຍ ເຊິ່ງມັນເປັນຄຳສັນຍາສຸດທ້າຍທີ່ປະທານໃຫ້ກັບມະນຸດ. ໃນປັດຈຸບັນ ມະນຸດຜ່ານການຂ້ຽນຕີ ແລະ ການພິພາກສາ; ເຈົ້າຄິດວ່າ ປະສົບການຂອງມະນຸດໃນສິ່ງດັ່ງກ່າວເປັນເລື່ອງທີ່ບໍ່ມີຄວາມໝາຍບໍ? ພາລະກິດແຫ່ງການຂ້ຽນຕີ ແລະ ການພິພາກສາຈະຖືກເຮັດໃຫ້ສຳເລັດໂດຍບໍ່ມີເຫດຜົນບໍ? ກ່ອນໜ້ານັ້ນ ມີການເວົ້າວ່າ ການຂ້ຽນຕີ ແລະ ການພິພາກສາມະນຸດກໍຄືການວາງເຂົາໃນເຫວເລິກ ເຊິ່ງໝາຍຄວາມເຖິງການນຳໂຊກຊາຕາ ແລະ ຄວາມຄາດຫວັງຂອງເຂົາອອກໄປ. ນີ້ກໍເພື່ອຜົນປະໂຫຍດຂອງສິ່ງໜຶ່ງ ນັ້ນຄື ການຊໍາລະລ້າງມະນຸດ. ມະນຸດບໍ່ໄດ້ຖືກວາງໃນເຫວເລິກໂດຍເຈດຕະນາ ຫຼັງຈາກທີ່ພຣະເຈົ້າຊໍາລະລ້າງມືຂອງພຣະອົງອອກຈາກເຂົາ. ກົງກັນຂ້າມມັນແມ່ນເພື່ອຈັດການກັບຄວາມກະບົດທີ່ຢູ່ພາຍໃນມະນຸດ ເພື່ອວ່າໃນສຸດທ້າຍແລ້ວ ສິ່ງທີ່ຢູ່ພາຍໃນມະນຸດອາດໄດ້ຮັບການຊໍາລະລ້າງ, ເພື່ອເຂົາອາດຈະມີຄວາມຮູ້ທີ່ແທ້ຈິງກ່ຽວກັບພຣະເຈົ້າ ແລະ ເປັນຄືກັບຄົນທີ່ບໍລິສຸດ. ຖ້າສິ່ງນີ້ຖືກເຮັດໃຫ້ສຳເລັດ ແລ້ວທຸກສິ່ງກໍຈະສຳເລັດລົງທັງໝົດ. ຕາມຄວາມຈິງແລ້ວ ເມື່ອສິ່ງເຫຼົ່ານັ້ນທີ່ຢູ່ພາຍໃນມະນຸດທີ່ຈຳເປັນຕ້ອງຖືກຈັດການກໍຖືກຈັດການແລ້ວ ແລະ ມະນຸດເປັນພະຍານທີ່ດັງສະນັ້ນ ຊາຕານກໍຈະຖືກເຮັດໃຫ້ພ່າຍແພ້ເຊັ່ນດຽວກັນ ແລະ ເຖິງແມ່ນວ່າມີສອງສາມສິ່ງເຫຼົ່ານັ້ນທີ່ຢູ່ພາຍໃນມະນຸດແຕ່ທຳອິດເຊິ່ງບໍ່ໄດ້ຖືກຊໍາລະລ້າງຢ່າງສົມບູນ, ເມື່ອຊາຕານຖືກເຮັດໃຫ້ພ່າຍແພ້ແລ້ວ ມັນກໍຈະບໍ່ເປັນບັນຫາອີກຕໍ່ໄປ ແລະ ໃນເວລານັ້ນ ມະນຸດຈະຖືກຊໍາລະລ້າງຢ່າງສົມບູນ. ມະນຸດບໍ່ເຄີຍມີປະສົບການຊີວິດແບບນັ້ນຈັກເທື່ອ ແຕ່ເມື່ອຊາຕານຖືກເຮັດໃຫ້ພ່າຍແພ້ ທຸກສິ່ງກໍຈະສະຫງົບລົງ ແລະ ສິ່ງເລັກໆນ້ອຍໆເຫຼົ່ານັ້ນທີ່ຢູ່ພາຍໃນມະນຸດກໍຈະຮັບການແກ້ໄຂທັງໝົດ ແລະ ເມື່ອບັນຫາຫຼັກນັ້ນຖືກແກ້ໄຂ ທຸກບັນຫາອື່ນກໍຈະຈົບລົງ. ໃນລະຫວ່າງການບັງເກີດເປັນມະນຸດຄັ້ງນີ້ຂອງພຣະເຈົ້າເທິງແຜ່ນດິນໂລກ, ເມື່ອພຣະອົງປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດ ພາລະກິດທຸກຢ່າງທີ່ພຣະອົງປະຕິບັດກໍເພື່ອເອົາຊະນະຊາຕານ ແລະ ພຣະອົງຈະເອົາຊະນະຊາຕານຜ່ານການເອົາຊະນະມະນຸດ ແລະ ການເຮັດໃຫ້ພວກເຈົ້າສົມບູນ. ເມື່ອພວກເຈົ້າເປັນພະຍານທີ່ດັງສະນັ້ນໃນທຳນອງດຽວກັນ ສິ່ງນີ້ກໍຈະເປັນເຄື່ອງໝາຍແຫ່ງຄວາມພ່າຍແພ້ຂອງຊາຕານ. ມະນຸດຖືກເອົາຊະນະກ່ອນ ແລະ ຖືກເຮັດໃຫ້ສົມບູນຢ່າງຄົບຖ້ວນໃນທີ່ສຸດເພື່ອເອົາຊະນະຊາຕານ. ເຖິງແນວໃດກໍຕາມ ໃນແກ່ນແທ້ແລ້ວ ນີ້ຄືຄວາມລອດພົ້ນຂອງມະນຸດຊາດທັງປວງຈາກທະເລທີ່ວ່າງເປົ່າແຫ່ງຄວາມເຈັບປວດເຊິ່ງເກີດຂຶ້ນໃນເວລາດຽວກັນກັບຄວາມພ່າຍແພ້ຂອງຊາຕານ. ບໍ່ວ່າພາລະກິດນີ້ຈະຖືກປະຕິບັດທົ່ວທັງຈັກກະວານທັງໝົດ ຫຼື ຢູ່ໃນປະເທດຈີນ, ທັງໝົດນັ້ນກໍແມ່ນເພື່ອເອົາຊະນະຊາຕານ ແລະ ນໍາຄວາມລອດພົ້ນມາເຖິງມະນຸດຊາດທັງປວງ ເພື່ອມະນຸດອາດຈະເຂົ້າສູ່ບ່ອນພັກຜ່ອນ. ພຣະເຈົ້າທີ່ບັງເກີດເປັນມະນຸດ ເຊິ່ງເປັນເນື້ອໜັງທີ່ປົກກະຕິນີ້ ກໍແມ່ນເພື່ອຜົນປະໂຫຍດແຫ່ງການເອົາຊະນະຊາຕານຢ່າງແນ່ນອນ. ພາລະກິດຂອງພຣະເຈົ້າແຫ່ງເນື້ອໜັງແມ່ນຖືກໃຊ້ເພື່ອນໍາຄວາມລອດພົ້ນມາເຖິງທຸກຄົນທີ່ຢູ່ພາຍໃຕ້ສະຫວັນ ເຊິ່ງເປັນຄົນຮັກພຣະເຈົ້າ, ແມ່ນເພື່ອຜົນປະໂຫຍດແຫ່ງການເອົາຊະນະບັນດາມະນຸດຊາດທັງປວງ ແລະ ຍິ່ງໄປກວ່ານັ້ນກໍເພື່ອຜົນປະໂຫຍດແຫ່ງການເອົາຊະນະ

ຊາຕານ. ຫົວໃຈຫຼັກຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າທັງໝົດແມ່ນບໍ່ສາມາດແຍກອອກຈາກການເອົາຊະນະຊາຕານເພື່ອນຳຄວາມລອດພົ້ນມາເຖິງມວນມະນຸດທັງປວງແລ້ວ. ໃນພາລະກິດສ່ວນຫຼາຍ ເປັນຫຍັງຈຶ່ງມັກມີຄຳເວົ້າທີ່ໃຫ້ພວກເຈົ້າເປັນພະຍານຢູ່ສະເໝີ? ພະຍານນີ້ແມ່ນກຳລັງແນໃສ່ໃຜ? ບໍ່ແມ່ນແນໃສ່ຊາຕານບໍ? ພະຍານນີ້ແມ່ນສ້າງຂຶ້ນເພື່ອພຣະເຈົ້າ ແລະ ມັນຖືກສ້າງຂຶ້ນເພື່ອເປັນພະຍານວ່າ ພາລະກິດຂອງພຣະເຈົ້າໄດ້ບັນລຸຜົນສຳເລັດແລ້ວ. ການເປັນພະຍານກ່ຽວຂ້ອງກັບພາລະກິດແຫ່ງການເອົາຊະນະຊາຕານ; ຖ້າບໍ່ມີສົງຄາມກັບຊາຕານ ແລ້ວມະນຸດກໍບໍ່ຈຳເປັນຕ້ອງເປັນພະຍານ. ມັນກໍເປັນເພາະຊາຕານຕ້ອງພ່າຍແພ້ ຈຶ່ງເຮັດໃຫ້ພຣະເຈົ້າຮຽກຮ້ອງໃຫ້ມະນຸດເປັນພະຍານໃຫ້ກັບພຣະອົງຕໍ່ໜ້າຊາຕານໃນເວລາດຽວກັນກັບທີ່ພຣະອົງກຳລັງຊ່ວຍມະນຸດ ເຊິ່ງພຣະອົງນຳໃຊ້ເພື່ອຊ່ວຍມະນຸດ ແລະ ເຮັດສົງຄາມກັບຊາຕານ. ດ້ວຍເຫດນັ້ນ ມະນຸດເປັນທັງຈຸດມຸ່ງໝາຍຂອງຄວາມລອດພົ້ນ ແລະ ເຄື່ອງມືໃນການເອົາຊະນະຊາຕານ, ເພາະສະນັ້ນ ມະນຸດຈຶ່ງເປັນຫົວໃຈຫຼັກຂອງພາລະກິດແຫ່ງການຄຸ້ມຄອງທັງໝົດຂອງພຣະເຈົ້າ ໃນຂະນະທີ່ຊາຕານກໍເປັນພຽງຈຸດມຸ່ງໝາຍຂອງການທຳລາຍ ເຊິ່ງເປັນສັດຕູ. ເຈົ້າອາດຮູ້ສຶກວ່າ ເຈົ້າບໍ່ໄດ້ເຮັດຫຍັງ ແຕ່ຍ້ອນການປ່ຽນແປງໃນອຸປະນິໄສຂອງເຈົ້າ ພະຍານຈຶ່ງໄດ້ເກີດຂຶ້ນ ແລະ ພະຍານນີ້ກໍແນໃສ່ຊາຕານ ແລະ ບໍ່ໄດ້ຖືກສ້າງສຳລັບມະນຸດ. ມະນຸດບໍ່ເໝາະສົມທີ່ຈະຊື່ນຊົມພະຍານດັ່ງກ່າວ. ເຂົາຈະສາມາດເຂົ້າໃຈພາລະກິດທີ່ພຣະເຈົ້າປະຕິບັດໄດ້ແນວໃດ? ຈຸດມຸ່ງໝາຍຂອງການຕໍ່ສູ້ຂອງພຣະເຈົ້າກໍແມ່ນຊາຕານ; ໃນຂະນະດຽວກັນມະນຸດເປັນພຽງແຕ່ຈຸດມຸ່ງໝາຍຂອງຄວາມລອດພົ້ນ. ມະນຸດມີອຸປະນິໄສທີ່ເສື່ອມຊາມຂອງຊາຕານ ແລະ ບໍ່ສາມາດເຂົ້າໃຈພາລະກິດນີ້ໄດ້. ນີ້ກໍຍ້ອນຄວາມເສື່ອມຊາມຂອງຊາຕານ ແລະ ບໍ່ໄດ້ຢູ່ພາຍໃນມະນຸດໂດຍທຳມະຊາດ ແຕ່ເປັນການບົງການຂອງຊາຕານ. ໃນປັດຈຸບັນ ພາລະກິດຫຼັກຂອງພຣະເຈົ້າແມ່ນເພື່ອເອົາຊະນະຊາຕານ ນັ້ນກໍຄື ເພື່ອເອົາຊະນະມະນຸດຢ່າງສົມບູນ ເພື່ອວ່າມະນຸດອາດເປັນພະຍານສຸດທ້າຍໃຫ້ກັບພຣະເຈົ້າຕໍ່ໜ້າຊາຕານ. ດ້ວຍວິທີນີ້ ທຸກສິ່ງຈະຖືກເຮັດໃຫ້ສຳເລັດ. ໃນຫຼາຍໆກໍລະນີ ເມື່ອເບິ່ງດ້ວຍຕາເປົ່າຂອງເຈົ້າ ມັນເບິ່ງຄືກັບວ່າ ບໍ່ມີຫຍັງຖືກເຮັດໃຫ້ສຳເລັດເລີຍ ແຕ່ໃນຄວາມຈິງ ພາລະກິດໄດ້ຖືກເຮັດໃຫ້ສຳເລັດແລ້ວ. ມະນຸດຮຽກຮ້ອງໃຫ້ພາລະກິດແຫ່ງຄວາມສຳເລັດທັງໝົດເປັນສິ່ງທີ່ເຫັນໄດ້ ແຕ່ເຖິງຈະບໍ່ໄດ້ເຮັດໃຫ້ເຈົ້າເຫັນ ເຮົາກໍໄດ້ສຳເລັດພາລະກິດຂອງເຮົາແລ້ວຍ້ອນຊາຕານຍອມພ່າຍແພ້ ເຊິ່ງໝາຍຄວາມວ່າ ມັນຖືກເອົາຊະນະຢ່າງສິ້ນເຊີງ ເພາະສະຕິປັນຍາ, ລິດອຳນາດ ແລະ ສິດອຳນາດຂອງພຣະເຈົ້າທັງໝົດໄດ້ປາບຊາຕານ. ນີ້ເປັນພະຍານທີ່ຕ້ອງເກີດຂຶ້ນຢ່າງແນ່ນອນ ແລະ ເຖິງແມ່ນວ່າ ມັນບໍ່ມີການສະແດງອອກຢ່າງຊັດເຈນໃນມະນຸດ, ເຖິງແມ່ນວ່າ ມັນບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ ຊາຕານກໍພ່າຍແພ້ເປັນທີ່ຮຽບຮ້ອຍແລ້ວ. ຄວາມສົມບູນຂອງພາລະກິດນີ້ແມ່ນຖືກບັນຊາໃຫ້ຕໍ່ສູ້ກັບຊາຕານ ແລະ ຖືກປະຕິບັດຍ້ອນສົງຄາມກັບຊາຕານ. ດ້ວຍເຫດນັ້ນມີຫຼາຍສິ່ງທີ່ມະນຸດບໍ່ໄດ້ເຫັນວ່າເປັນຄວາມສຳເລັດ, ແຕ່ໃນສາຍຕາຂອງພຣະເຈົ້າ ພວກມັນເປັນສິ່ງທີ່ປະສົບຜົນສຳເລັດເປັນເວລາດົນນານມາແລ້ວ. ນີ້ຄືໜຶ່ງໃນຄວາມຈິງຂ້າງໃນຂອງພາລະກິດທັງໝົດຂອງພຣະເຈົ້າ.

ເມື່ອຊາຕານພ່າຍແພ້ ເຊິ່ງເວົ້າໄດ້ວ່າ ເມື່ອມະນຸດໄດ້ຖືກເອົາຊະນະຢ່າງສົມບູນ ແລ້ວມະນຸດກໍຈະເຂົ້າໃຈວ່າ ພາລະກິດທັງໝົດນີ້ກໍແມ່ນເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນ ແລະ ວິທີການແຫ່ງຄວາມລອດພົ້ນນີ້ກໍເພື່ອຍາດເອົາຜູ້ຄົນຈາກມືຂອງຊາຕານ. ພາລະກິດ 6.000 ປີແຫ່ງການຄຸ້ມຄອງຂອງພຣະເຈົ້າຖືກແບ່ງອອກເປັນສາມຍຸກ: ຍຸກແຫ່ງພຣະບັນຍັດ, ຍຸກແຫ່ງພຣະຄຸນ ແລະ ຍຸກແຫ່ງອານາຈັກ. ທັງສາມຂັ້ນຕອນຂອງພາລະກິດແມ່ນເພື່ອຜົນປະໂຫຍດຂອງຄວາມລອດພົ້ນຂອງມະນຸດຊາດ ເຊິ່ງເວົ້າໄດ້ວ່າ ພວກມັນແມ່ນເພື່ອຄວາມລອດພົ້ນຂອງມະນຸດຊາດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມຢ່າງຮຸນແຮງ. ຢ່າງໃດກໍຕາມ ໃນເວລາດຽວກັນ ພວກມັນເປັນແບບນັ້ນກໍເພື່ອພຣະເຈົ້າອາດຈະເຮັດສົງຄາມກັບຊາຕານໄດ້. ດ້ວຍເຫດນັ້ນ ຄືກັບທີ່ພາລະກິດແຫ່ງຄວາມລອດພົ້ນຖືກແບ່ງອອກເປັນສາມຂັ້ນຕອນ ສະນັ້ນສົງຄາມກັບຊາຕານກໍຖືກແບ່ງອອກເປັນສາມຂັ້ນຕອນເຊັ່ນກັນ ແລະ ລັກສະນະສອງຢ່າງຂອງພາລະກິດຂອງພຣະເຈົ້າຖືກດຳເນີນໄປພ້ອມໆກັນ. ຕາມຄວາມຈິງແລ້ວ ສົງຄາມກັບຊາຕານແມ່ນເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນຂອງມະນຸດຊາດ ແລະ ຍ້ອນພາລະກິດແຫ່ງຄວາມລອດພົ້ນຂອງມະນຸດບໍ່ແມ່ນສິ່ງທີ່ສາມາດເຮັດໃຫ້ສຳເລັດໄດ້ໃນຂັ້ນຕອນດຽວ ສົງຄາມກັບຊາຕານຈຶ່ງຖືກແບ່ງອອກເປັນຂັ້ນຕອນ ແລະ ໄລຍະ ແລະ ກໍເຮັດສົງຄາມກັບຊາຕານຕາມຄວາມຕ້ອງການຂອງມະນຸດ ແລະ ການຂະຫຍາຍຄວາມເສື່ອມຊາມທີ່ຊາຕານມີຕໍ່ມະນຸດ. ບາງເທື່ອ ໃນຈິນຕະນາການຂອງມະນຸດ ເຂົາເຊື່ອວ່າ ໃນສົງຄາມນີ້ ພຣະເຈົ້າຈະຈັບອາວຸດຂຶ້ນຕໍ່ສູ້ກັບຊາຕານໃນທຳນອງດຽວກັນກັບທີ່ກອງທັບສອງຝ່າຍຈະຕໍ່ສູ້ກັນ. ນີ້ເປັນພຽງແຕ່ສິ່ງທີ່ຄວາມສະຫຼາດຂອງມະນຸດສາມາດຈິນຕະນາການໄດ້; ມັນເປັນຄວາມຄິດທີ່ບໍ່ແຈ່ມແຈ້ງຫຼາຍ ແລະ ບໍ່ເປັນຈິງເລີຍ ແຕ່ມັນກໍເປັນສິ່ງທີ່ມະນຸດເຊື່ອ. ແລະ ຍ້ອນເຮົາກ່າວໃນທີ່ນີ້ວ່າ ວິທີການແຫ່ງຄວາມລອດພົ້ນຂອງມະນຸດແມ່ນໂດຍການເຮັດສົງຄາມກັບຊາຕານ ມະນຸດຈຶ່ງຈິນຕະນາການວ່ານີ້ຄືວິທີທີ່ສົງຄາມດຳເນີນການ. ໃນພາລະກິດແຫ່ງຄວາມລອດພົ້ນຂອງມະນຸດນັ້ນ ມີການດຳເນີນການຢູ່ສາມຍຸກ ເຊິ່ງເວົ້າໄດ້ວ່າ ການຕໍ່ສູ້ກັບຊາຕານແມ່ນໄດ້ແຍກອອກເປັນສາມຂັ້ນຕອນກ່ອນການເອົາຊະນະຊາຕານຄັ້ງດຽວ ແລະ ສຳລັບທຸກຄົນ. ແຕ່ເບື້ອງໃນທີ່ແທ້ຈິງຂອງພາລະກິດທັງໝົດໃນການຕໍ່ສູ້ກັບຊາຕານແມ່ນໄດ້ຮັບຜົນຜ່ານສອງສາມຂັ້ນຕອນຂອງພາລະກິດ ເຊັ່ນ: ການມີຄວາມເມດຕາກະລຸນາຕໍ່ມະນຸດ, ການເປັນເຄື່ອງຖວາຍບາບໃຫ້ແກ່ມະນຸດ, ການໃຫ້ອະໄພຕໍ່ຄວາມຜິດບາບຂອງມະນຸດ, ການເອົາຊະນະມະນຸດ ແລະ ການສ້າງມະນຸດໃຫ້ສົມບູນ. ຄວາມຈິງກໍຄື ການຕໍ່ສູ້ກັບຊາຕານບໍ່ແມ່ນການໃຊ້ອາວຸດສູ້ຮົບກັບຊາຕານ ແຕ່ເປັນຄວາມລອດພົ້ນຂອງມະນຸດ, ການປະຕິບັດພາລະກິດເພື່ອຊີວິດຂອງມະນຸດ ແລະ ການປ່ຽນແປງອຸປະນິໄສຂອງມະນຸດ ເພື່ອມະນຸດຈະໄດ້ເປັນພະຍານໃຫ້ແກ່ພຣະເຈົ້າ. ນີ້ແມ່ນວິທີເອົາຊະນະຊາຕານ. ຊາຕານພ່າຍແພ້ຍ້ອນການປ່ຽນແປງຈິດໃຈອັນເສື່ອມຊາມຂອງມະນຸດ. ເມື່ອຊາຕານໄດ້ຖືກເອົາຊະນະ ເຊິ່ງນັ້ນກໍຄື ເມື່ອມະນຸດໄດ້ລອດພົ້ນຢ່າງສົມບູນ ແລ້ວເມື່ອນັ້ນຊາຕານທີ່ອັບອາຍໃຈກໍຈະຖືກຜູກມັດໄວ້ຢ່າງສົມບູນ ແລະ ດ້ວຍວິທີນີ້ ມະນຸດຈຶ່ງຈະໄດ້ຮັບຄວາມລອດພົ້ນຢ່າງສົມບູນ. ສະນັ້ນ ແກ່ນແທ້ຂອງຄວາມລອດພົ້ນຂອງມະນຸດກໍຄື ການເຮັດສົງຄາມກັບຊາຕານ ແລະ ໂດຍສ່ວນໃຫຍ່ແລ້ວ ສົງຄາມ

ນີ້ກໍຈະສະທ້ອນໃຫ້ເຫັນຢູ່ໃນຄວາມລອດພົ້ນຂອງມະນຸດ. ໃນໄລຍະຍຸກສຸດທ້າຍ ເຊິ່ງມະນຸດຈະຖືກເອົາຊະນະ ແມ່ນຍຸກສຸດທ້າຍຂອງການຕໍ່ສູ້ກັບຊາຕານ ແລະ ມັນກໍຍັງເປັນພາລະກິດຊ່ວຍໃຫ້ມະນຸດລອດພົ້ນອອກຈາກອິດທິພົນຂອງຊາຕານ. ຄວາມໝາຍແທ້ຈິງຂອງການເອົາຊະນະມະນຸດແມ່ນການສົ່ງມະນຸດໃນຮູບຮ່າງຊາຕານຄືນ, ນັ້ນກໍຄື ມະນຸດທີ່ຖືກຊາຕານເຮັດໃຫ້ເສື່ອມຊາມແມ່ນໄດ້ຖືກສົ່ງຄືນໃຫ້ກັບພຣະຜູ້ສ້າງ ຫຼັງຈາກທີ່ມະນຸດຖືກເອົາຊະນະ ໂດຍຜ່ານການປະຖິ້ມຊາຕານ ແລ້ວກັບຄືນສູ່ພຣະເຈົ້າຢ່າງສົມບູນ. ດ້ວຍວິທີນີ້ ມະນຸດຈະຖືກຊ່ວຍໃຫ້ລອດພົ້ນຢ່າງສົມບູນ. ດັ່ງນັ້ນ, ພາລະກິດແຫ່ງການເອົາຊະນະແມ່ນພາລະກິດສຸດທ້າຍໃນການຕໍ່ສູ້ກັບຊາຕານ ແລະ ເປັນຍຸກສຸດທ້າຍຂອງພາລະກິດຄຸ້ມຄອງຂອງພຣະເຈົ້າເພື່ອເອົາຊະນະຊາຕານ. ຖ້າບໍ່ມີພາລະກິດນີ້, ຄວາມລອດພົ້ນຂອງມະນຸດຢ່າງຄົບຖ້ວນຈະບໍ່ມີທາງເປັນໄປໄດ້, ການເອົາຊະນະຊາຕານຢ່າງສົມບູນກໍຈະເປັນໄປບໍ່ໄດ້ ແລະ ມະນຸດຊາດຈະບໍ່ສາມາດເຂົ້າໄປສູ່ຈຸດໝາຍປາຍທາງອັນມະຫັດສະຈັນນັ້ນໄດ້ ຫຼື ຫຼຸດພົ້ນຈາກອິດທິພົນຂອງຊາຕານໄດ້. ດັ່ງນັ້ນ ພາລະກິດແຫ່ງຄວາມລອດພົ້ນຂອງມະນຸດບໍ່ສາມາດສິ້ນສຸດໄດ້ກ່ອນສົງຄາມກັບຊາຕານຈະສິ້ນສຸດລົງ ຍ້ອນຫົວໃຈຫຼັກຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າແມ່ນເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນຂອງມະນຸດຊາດ. ມະນຸດຊາດໃນຊ່ວງທຳອິດແມ່ນຢູ່ໃນມືຂອງພຣະເຈົ້າ ແຕ່ຍ້ອນການລໍ້ລວງ ແລະ ຄວາມເສື່ອມຊາມຂອງຊາຕານ ມະນຸດຈຶ່ງຖືກຜູກມັດໂດຍຊາຕານ ແລະ ຕົກໄປຢູ່ໃນມືຂອງສິ່ງທີ່ຊົ່ວຮ້າຍ. ດ້ວຍເຫດນັ້ນ ຊາຕານຈຶ່ງກາຍເປັນຈຸດມຸ່ງໝາຍທີ່ພ່າຍແພ້ໃນພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ. ຍ້ອນຊາຕານຄອບຄອງມະນຸດ ແລະ ຍ້ອນມະນຸດເປັນຕົ້ນຕໍຂອງການຄຸ້ມຄອງຂອງພຣະເຈົ້າທັງໝົດ, ຖ້າມະນຸດຕ້ອງໄດ້ຮັບການຊ່ວຍເຫຼືອ ແລ້ວເຂົາກໍຕ້ອງຖືກຍາດຄືນຈາກມືຂອງຊາຕານ ເຊິ່ງເວົ້າໄດ້ວ່າ ຕ້ອງມີການພາມະນຸດກັບຄືນຫຼັງຈາກທີ່ຖືກຊາຕານຈັບເປັນຊະເລີຍ. ດັ່ງນັ້ນ ຊາຕານຕ້ອງຖືກເອົາຊະນະໂດຍຜ່ານການປ່ຽນແປງອຸປະນິໄສທີ່ເກົ່າແກ່ຂອງມະນຸດ ນັ້ນກໍຄືການປ່ຽນແປງທີ່ຟື້ນຟູສະຕິເດີມຂອງມະນຸດ. ດ້ວຍວິທີນີ້ ມະນຸດຜູ້ເຊິ່ງຖືກຈັບເປັນຊະເລີຍກໍສາມາດຖືກຍາດຄືນຈາກມືຂອງຊາຕານ. ຖ້າມະນຸດເປັນອິດສະຫຼະຈາກອິດທິພົນ ແລະ ການເປັນທາດຂອງຊາຕານ, ຊາຕານຈະອັບອາຍ, ມະນຸດຈະຖືກພາກັບຄືນໃນທີ່ສຸດ ແລະ ຊາຕານຈະພ່າຍແພ້. ຍ້ອນມະນຸດໄດ້ເປັນອິດສະຫຼະຈາກອິດທິພົນດ້ານມືດຂອງຊາຕານ ມະນຸດຈຶ່ງກາຍມາເປັນສິ່ງທີ່ຍາດເອົາມາຈາກສົງຄາມທັງໝົດນີ້ ແລະ ຊາຕານກໍຈະກາຍມາເປັນຈຸດມຸ່ງໝາຍທີ່ຈະຖືກລົງໂທດຫຼັງຈາກທີ່ສົງຄາມນີ້ສິ້ນສຸດລົງ ເຊິ່ງເປັນເວລາຫຼັງຈາກທີ່ພາລະກິດແຫ່ງຄວາມລອດພົ້ນຂອງມະນຸດຊາດທັງໝົດຖືກເຮັດໃຫ້ສຳເລັດ.

ພຣະເຈົ້າບໍ່ມີເຈດຕະນາຮ້າຍຕໍ່ສິ່ງຖືກສ້າງ; ພຣະອົງພຽງແຕ່ປາຖະໜາທີ່ຈະເອົາຊະນະຊາຕານ. ພາລະກິດທັງໝົດຂອງພຣະອົງ ບໍ່ວ່າຈະເປັນການຕີສອນ ຫຼື ການພິພາກສາ ກໍແນໃສ່ຊາຕານ; ມັນຖືກປະຕິບັດເພື່ອຜົນປະໂຫຍດແຫ່ງຄວາມລອດພົ້ນຂອງມະນຸດ, ທັງໝົດນີ້ກໍເພື່ອເອົາຊະນະຊາຕານ ແລະ ມັນມີຈຸດປະສົງດຽວ ນັ້ນກໍຄື ການເຮັດສົງຄາມກັບຊາຕານຈົນເຖິງທີ່ສຸດ! ພຣະເຈົ້າຈະບໍ່ພັກຜ່ອນຈັກເທື່ອຈົນກວ່າພຣະອົງຈະມີໄຊຊະນະເໜືອຊາຕານ! ພຣະອົງຈະພັກຜ່ອນພຽງແຕ່ເມື່ອພຣະອົງໄດ້

ເອົາຊະນະຊາຕານແລ້ວ. ຍ້ອນພາລະກິດທັງໝົດທີ່ພຣະເຈົ້າປະຕິບັດນັ້ນແມ່ນແນໃສ່ຊາຕານ ແລະ ຍ້ອນຄົນທີ່ຖືກເຮັດໃຫ້ເສື່ອມຊາມນັ້ນຢູ່ພາຍໃຕ້ການຄວບຄຸມແຫ່ງອຳນາດຂອງຊາຕານ ແລະ ດຳລົງຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ ເຊິ່ງຫາກປາສະຈາກການຕໍ່ສູ້ກັບຊາຕານ ແລະ ການທຳລາຍມັນ ຊາຕານຈະບໍ່ຍອມຜ່ອນຄາຍອິດທິພົນທີ່ມັນມີຕໍ່ຜູ້ຄົນເຫຼົ່ານີ້ ແລະ ພວກເຂົາກໍບໍ່ສາມາດຖືກຮັບໄດ້. ຖ້າພວກເຂົາບໍ່ໄດ້ຖືກຮັບ ມັນກໍຈະພິສູດວ່າ ຊາຕານຍັງບໍ່ທັນໄດ້ພ່າຍແພ້ເທື່ອ ແລະ ມັນຍັງບໍ່ໄດ້ຖືກປາບເທື່ອ. ດ້ວຍເຫດນັ້ນ ໃນແຜນການຄຸ້ມຄອງ 6.000 ປີ ຂອງພຣະອົງ ໃນລະຫວ່າງຂັ້ນຕອນທຳອິດ ພຣະອົງແມ່ນໄດ້ປະຕິບັດພາລະກິດແຫ່ງພຣະບັນຍັດ, ໃນລະຫວ່າງຂັ້ນຕອນທີສອງ ພຣະອົງແມ່ນໄດ້ປະຕິບັດພາລະກິດຂອງຍຸກແຫ່ງພຣະຄຸນ ນັ້ນກໍຄື ພາລະກິດແຫ່ງການຖືກຄຶງທີ່ໄມ້ກາງແຂນ ແລະ ໃນລະຫວ່າງຂັ້ນຕອນທີສາມ ພຣະອົງແມ່ນໄດ້ປະຕິບັດພາລະກິດແຫ່ງການເອົາຊະນະມະນຸດ. ທຸກພາລະກິດແມ່ນແນໃສ່ຂອບເຂດທີ່ຊາຕານເຮັດໃຫ້ມະນຸດຊາດເສື່ອມຊາມ, ທຸກພາລະກິດແມ່ນເພື່ອເອົາຊະນະຊາຕານ ແລະ ແຕ່ລະຂັ້ນຕອນທຸກຢ່າງແມ່ນເພື່ອຜົນປະໂຫຍດແຫ່ງການເອົາຊະນະຊາຕານ. ແກ່ນແທ້ຂອງພາລະກິດ 6.000 ປີແຫ່ງການຄຸ້ມຄອງຂອງພຣະເຈົ້າແມ່ນສົງຄາມຕໍ່ສູ້ກັບມັງກອນແດງໃຫຍ່ ແລະ ພາລະກິດແຫ່ງການຄຸ້ມຄອງມະນຸດຊາດກໍແມ່ນພາລະກິດແຫ່ງການເອົາຊະນະຊາຕານເຊັ່ນດຽວກັນ ແລະ ເປັນພາລະກິດແຫ່ງການເຮັດສົງຄາມກັບຊາຕານ. ພຣະເຈົ້າເຮັດສົງຄາມເປັນເວລາ 6.000 ປີ ແລະ ດ້ວຍເຫດນັ້ນກໍປະຕິບັດພາລະກິດເປັນເວລາ 6.000 ປີ ເພື່ອນຳມະນຸດສູ່ອານາຈັກໃໝ່ໃນທີ່ສຸດ. ເມື່ອຊາຕານພ່າຍແພ້ ມະນຸດຈະຖືກປົດປ່ອຍຢ່າງສົມບູນ. ນີ້ບໍ່ແມ່ນແນວທາງຂອງພາລະກິດຂອງພຣະເຈົ້າໃນປັດຈຸບັນບໍ? ນີ້ຄືແນວທາງຂອງພາລະກິດໃນປັດຈຸບັນຢ່າງແນ່ນອນ ນັ້ນກໍຄື ການປົດປ່ອຍຢ່າງສົມບູນ ແລະ ການເຮັດໃຫ້ມະນຸດເປັນອິດສະຫຼະ ເພື່ອເຂົາຈະບໍ່ຕົກຢູ່ພາຍໃຕ້ກົດລະບຽບໃດ ຫຼື ຖືກຈຳກັດໂດຍຂໍ້ຜູກມັດ ຫຼື ຂໍ້ຈຳກັດອື່ນໆ. ທຸກພາລະກິດຖືກປະຕິບັດໂດຍສອດຄ່ອງກັບວຸດທິພາວະຂອງພວກເຈົ້າ ແລະ ໂດຍສອດຄ່ອງກັບຄວາມຕ້ອງການຂອງພວກເຈົ້າ ເຊິ່ງໝາຍຄວາມວ່າ ພວກເຈົ້າຖືກຈັດກຽມດ້ວຍທຸກສິ່ງຢ່າງທີ່ພວກເຈົ້າສາມາດເຮັດໃຫ້ສຳເລັດໄດ້. ເຊິ່ງມັນບໍ່ແມ່ນກໍລະນີດຽວກັນກັບ “ການໄລ່ເປັດໃຫ້ຂຶ້ນງ່າໄມ້” ໂດຍບັງຄັບພວກເຈົ້າທຸກສິ່ງ; ກົງກັນຂ້າມ ທຸກພາລະກິດນີ້ແມ່ນຖືກປະຕິບັດໂດຍສອດຄ່ອງກັບຄວາມຕ້ອງການທີ່ແທ້ຈິງຂອງພວກເຈົ້າ. ແຕ່ລະຂັ້ນຕອນຂອງພາລະກິດແມ່ນສອດຄ່ອງກັບຄວາມຕ້ອງການ ແລະ ເງື່ອນໄຂທີ່ແທ້ຈິງຂອງມະນຸດ; ແຕ່ລະຂັ້ນຕອນຂອງພາລະກິດແມ່ນເພື່ອຜົນປະໂຫຍດແຫ່ງການເອົາຊະນະຊາຕານ. ໃນຄວາມຈິງແລ້ວບໍ່ມີອຸປະສັກກັ້ນລະຫວ່າງພຣະຜູ້ສ້າງ ແລະ ສິ່ງຖືກສ້າງຂອງພຣະອົງໃນຕອນເລີ່ມຕົ້ນ. ອຸປະສັກທັງໝົດແມ່ນເກີດຂຶ້ນຈາກຊາຕານ. ມະນຸດບໍ່ສາມາດເຫັນ ຫຼື ສຳຜັດຫຍັງເລີຍ ຍ້ອນການລົບກວນຂອງຊາຕານ ແລະ ຄວາມເສື່ອມຊາມຂອງມະນຸດ. ມະນຸດເປັນເຫຍື່ອ ທີ່ຖືກລໍ້ລວງ. ເມື່ອຊາຕານພ່າຍແພ້ ສິ່ງຖືກສ້າງຈະເຫັນພຣະຜູ້ສ້າງ ແລະ ພຣະຜູ້ສ້າງຈະເຝົ້າເບິ່ງສິ່ງຖືກສ້າງ ແລະ ສາມາດນຳພາພວກເຂົາດ້ວຍຕົວພຣະອົງເອງ. ມີພຽງແຕ່ສິ່ງນີ້ທີ່ເປັນຊີວິດທີ່ມະນຸດຄວນມີຢູ່ເທິງແຜ່ນດິນໂລກ. ດ້ວຍເຫດນັ້ນ ພາລະກິດຫຼັກໆຂອງພຣະເຈົ້າແມ່ນເພື່ອເອົາຊະນະຊາຕານ ແລະ ເມື່ອຊາຕານພ່າຍແພ້ ທຸກສິ່ງກໍຈະຖືກ

ແກ້ໄຂ. ໃນປັດຈຸບັນ ເຈົ້າກໍໄດ້ເຫັນແລ້ວວ່າ ມັນບໍ່ແມ່ນບັນຫາທຳມະດາທີ່ພຣະເຈົ້າມາທ່າມກາງມະນຸດ. ພຣະອົງບໍ່ໄດ້ມາເພື່ອໃຊ້ເວລາແຕ່ລະມື້ໃນການຈັບຜິດພວກເຈົ້າ, ເພື່ອເວົ້ານັ້ນເວົ້ານີ້ ແລະ ນັ້ນ ຫຼື ເພື່ອພຽງແຕ່ເຮັດໃຫ້ພວກເຈົ້າເຫັນວ່າ ພຣະອົງມີລັກສະນະແບບໃດ ແລະ ພຣະອົງກ່າວ ແລະ ດຳລົງຊີວິດແນວໃດ. ພຣະເຈົ້າບໍ່ກາຍມາເປັນເນື້ອໜັງພຽງແຕ່ເພື່ອເຮັດໃຫ້ພວກເຈົ້າເຝົ້າເບິ່ງພຣະອົງ ຫຼື ເປີດຕາຂອງພວກເຈົ້າ ຫຼື ເຮັດໃຫ້ພວກເຈົ້າໄດ້ຍິນຄວາມລຶກລັບທີ່ພຣະອົງໄດ້ກ່າວເຖິງ ແລະ ຕາປະທັບເຈັດຢ່າງທີ່ພຣະອົງໄດ້ເປີດ. ກົງກັນຂ້າມ ພຣະອົງກາຍມາເປັນເນື້ອໜັງກໍເພື່ອເອົາຊະນະຊາຕານ. ພຣະອົງໄດ້ມາທ່າມກາງມະນຸດໂດຍຜ່ານເນື້ອໜັງເພື່ອຊ່ວຍມະນຸດດ້ວຍຕົວພຣະອົງເອງ ແລະ ເພື່ອເຮັດສົງຄາມກັບຊາຕານ; ນີ້ແມ່ນຄວາມສຳຄັນຂອງການບັງເກີດເປັນມະນຸດຂອງພຣະອົງ. ຖ້າບໍ່ແມ່ນເພື່ອການເອົາຊະນະຊາຕານ ແລ້ວພຣະອົງກໍຈະບໍ່ປະຕິບັດພາລະກິດນີ້ດ້ວຍຕົວພຣະອົງເອງ. ພຣະເຈົ້າໄດ້ລົງມາເທິງແຜ່ນດິນໂລກເພື່ອປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດ, ເພື່ອເປີດເຜີຍຕົວພຣະອົງເອງເປັນການສ່ວນຕົວຕໍ່ມະນຸດ ແລະ ເຮັດໃຫ້ມະນຸດໄດ້ເຫັນພຣະອົງ; ນີ້ເປັນເລື່ອງເລັກນ້ອຍບໍ? ມັນບໍ່ແມ່ນເລື່ອງທຳມະດາແທ້ໆ! ມັນບໍ່ຄືກັບທີ່ມະນຸດຈິນຕະນາການວ່າ ພຣະເຈົ້າໄດ້ລົງມາເພື່ອມະນຸດອາດເຝົ້າເບິ່ງພຣະອົງ, ເພື່ອມະນຸດອາດເຂົ້າໃຈວ່າ ພຣະເຈົ້າມີຈິງ ແລະ ບໍ່ໄດ້ເລື່ອນລອຍ ຫຼື ວ່າງເປົ່າ ແລະ ພຣະເຈົ້າສູງສົ່ງແຕ່ກໍຍັງຖ່ອມຕົວ. ສິ່ງນີ້ທຳມະດາຂະໜາດນັ້ນບໍ? ມັນເປັນຍ້ອນຊາຕານໄດ້ເຮັດໃຫ້ເນື້ອໜັງຂອງມະນຸດເສື່ອມຊາມຢ່າງແນ່ນອນ ແລະ ມະນຸດເປັນຄົນທີ່ພຣະເຈົ້າເຈດຕະນາທີ່ຈະຊ່ວຍ ພຣະເຈົ້າຈຶ່ງຕ້ອງສວມໃສ່ເນື້ອໜັງເພື່ອເຮັດສົງຄາມກັບຊາຕານ ແລະ ເພື່ອລ້ຽງດູມະນຸດດ້ວຍຕົວພຣະອົງເອງ. ມີພຽງແຕ່ສິ່ງນີ້ເທົ່ານັ້ນທີ່ມີປະໂຫຍດກັບພາລະກິດຂອງພຣະອົງ. ເນື້ອໜັງທີ່ບັງເກີດເປັນມະນຸດທັງສອງຄັ້ງຂອງພຣະເຈົ້າມີຢູ່ກໍເພື່ອເອົາຊະນະຊາຕານ ແລະ ຍັງໄດ້ມີຢູ່ເພື່ອຊ່ວຍມະນຸດໃນທາງທີ່ດີກວ່າ. ນັ້ນກໍຍ້ອນວ່າ ຄົນທີ່ກຳລັງເຮັດສົງຄາມກັບຊາຕານສາມາດເປັນພຽງແຕ່ພຣະເຈົ້າເທົ່ານັ້ນ ບໍ່ວ່າຈະເປັນພຣະວິນຍານຂອງພຣະເຈົ້າ ຫຼື ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະເຈົ້າກໍຕາມ. ຖ້າເວົ້າໃຫ້ສັ້ນກໍຄື ຄົນທີ່ກຳລັງເຮັດສົງຄາມກັບຊາຕານບໍ່ສາມາດເປັນທູດສະຫວັນ ຢ່າວ່າແຕ່ເປັນມະນຸດເລີຍ ຜູ້ເຊິ່ງຖືກຊາຕານເຮັດໃຫ້ເສື່ອມຊາມ. ທູດສະຫວັນກໍບໍ່ມີອຳນາດທີ່ຈະປະຕິບັດພາລະກິດນີ້ ແລະ ມະນຸດກໍຍິ່ງບໍ່ມີກຳລັງເລີຍ. ເມື່ອເປັນດັ່ງນັ້ນ ຖ້າພຣະເຈົ້າປາຖະໜາທີ່ຈະປະຕິບັດພາລະກິດໃນຊີວິດຂອງມະນຸດ, ຖ້າພຣະອົງປາຖະໜາທີ່ຈະມາເທິງແຜ່ນດິນໂລກດ້ວຍຕົວພຣະອົງເອງເພື່ອຊ່ວຍມະນຸດ ແລ້ວພຣະອົງຕ້ອງກາຍມາເປັນເນື້ອໜັງດ້ວຍຕົວພຣະອົງເອງ ນັ້ນກໍຄື ພຣະອົງຕ້ອງສວມໃສ່ເນື້ອໜັງດ້ວຍຕົວພຣະອົງເອງ ແລະ ດ້ວຍຕົວຕົນທຳມະຊາດຂອງພຣະອົງ ແລະ ພາລະກິດທີ່ພຣະອົງຕ້ອງປະຕິບັດ, ລົງມາທ່າມກາງມະນຸດ ແລະ ຊ່ວຍມະນຸດດ້ວຍຕົວພຣະອົງເອງ. ຖ້າບໍ່ດັ່ງນັ້ນ ຖ້າເປັນພຣະວິນຍານຂອງພຣະເຈົ້າ ຫຼື ມະນຸດທີ່ປະຕິບັດພາລະກິດນີ້ ແລ້ວກໍຈະບໍ່ໄດ້ຫຍັງຈາກສົງຄາມນີ້ ແລະ ມັນຈະບໍ່ສິ້ນສຸດຈັກເທື່ອ. ພຽງແຕ່ເມື່ອພຣະເຈົ້າກາຍມາເປັນເນື້ອໜັງເພື່ອອອກຮົບຕໍ່ສູ້ກັບຊາຕານທ່າມກາງມະນຸດດ້ວຍຕົວພຣະອົງເອງເທົ່ານັ້ນ ມະນຸດຈຶ່ງຈະມີຊ່ອງທາງແຫ່ງຄວາມລອດພົ້ນ. ຍິ່ງໄປກວ່ານັ້ນ ມີພຽງແຕ່ຕອນນັ້ນ ຊາຕານຈຶ່ງຈະອັບອາຍ ແລະ ໜີໄປໂດຍບໍ່ມີໂອກາດໃດເລີຍທີ່ຈະ

ຊູດຣິດ ຫຼື ບໍ່ມີແຜນໃດເລີຍທີ່ຈະດຳເນີນການ. ພຣະວິນຍານຂອງພຣະເຈົ້າກໍບໍ່ສາມາດບັນລຸພາລະກິດທີ່ພຣະເຈົ້າຜູ້ຊົງບັງເກີດເປັນມະນຸດປະຕິບັດ ແລະ ຍິ່ງໄປກວ່ານັ້ນ ບໍ່ມີມະນຸດຄົນໃດທີ່ເກີດຈາກເນື້ອໜັງຂອງຄົນທີ່ສາມາດປະຕິບັດແທນພຣະເຈົ້າໄດ້ ຍ້ອນພາລະກິດທີ່ພຣະອົງປະຕິບັດແມ່ນເພື່ອຜົນປະໂຫຍດແຫ່ງຊີວິດຂອງມະນຸດ ແລະ ເພື່ອປ່ຽນແປງອຸປະນິໄສທີ່ເສື່ອມຊາມຂອງມະນຸດ. ຖ້າມະນຸດເຂົ້າຮ່ວມໃນສົງຄາມນີ້ ເຂົາພຽງແຕ່ຈະພ່າຍໜີດ້ວຍຄວາມສັບສົນແຫ່ງຄວາມຈິບຫາຍ ແລະ ຈະບໍ່ສາມາດປ່ຽນແປງອຸປະນິໄສທີ່ເສື່ອມຊາມຂອງມະນຸດໄດ້ເລີຍ. ເຂົາຈະບໍ່ສາມາດຊ່ວຍມະນຸດຈາກໄມ້ກາງແຂນໄດ້ ຫຼື ເອົາຊະນະມະນຸດຊາດທີ່ມີຄວາມກະບົດທັງໝົດ ແຕ່ຈະສາມາດປະຕິບັດພາລະກິດເລັກນ້ອຍທີ່ເກົ່າແກ່ໂດຍບໍ່ອີງຕາມຫຼັກການເທົ່ານັ້ນ ຫຼື ບໍ່ກໍປະຕິບັດພາລະກິດທີ່ບໍ່ກ່ຽວຂ້ອງກັບການເອົາຊະນະຊາຕານ. ສະນັ້ນ ເປັນຫຍັງຕ້ອງຫຍຸ້ງຍາກ? ແມ່ນຫຍັງຄືຄວາມສຳຄັນຂອງພາລະກິດທີ່ບໍ່ສາມາດຮັບມະນຸດຊາດ ຢ່າວ່າແຕ່ເອົາຊະນະຊາຕານເລີຍ? ດ້ວຍເຫດນັ້ນ ສົງຄາມກັບຊາຕານຈຶ່ງພຽງແຕ່ສາມາດຖືກປະຕິບັດໂດຍພຣະເຈົ້າເອງ ແລະ ມັນກໍເປັນໄປບໍ່ໄດ້ເລີຍທີ່ມະນຸດຈະເຮັດມັນໄດ້. ໜ້າທີ່ຂອງມະນຸດກໍຄືການເຊື່ອຟັງ ແລະ ປະຕິບັດຕາມ ຍ້ອນມະນຸດບໍ່ສາມາດປະຕິບັດພາລະກິດຄ້າຍກັບການເນລະມິດສ້າງສະຫວັນ ແລະ ແຜ່ນດິນໂລກ ຫຼື ຍິ່ງໄປກວ່ານັ້ນ ເຂົາບໍ່ສາມາດປະຕິບັດພາລະກິດແຫ່ງການຕໍ່ສູ້ກັບຊາຕານ. ມະນຸດພຽງແຕ່ສາມາດເຮັດໃຫ້ພຣະຜູ້ສ້າງພໍໃຈໂດຍຢູ່ພາຍໃຕ້ການນຳຂອງພຣະເຈົ້າເອງ ເຊິ່ງເປັນສິ່ງທີ່ເຮັດໃຫ້ຊາຕານພ່າຍແພ້; ນີ້ແມ່ນສິ່ງດຽວທີ່ມະນຸດສາມາດເຮັດໄດ້. ດ້ວຍເຫດນັ້ນ ທຸກຄັ້ງທີ່ສົງຄາມໃໝ່ເລີ່ມຕົ້ນຂຶ້ນ ເຊິ່ງເວົ້າໄດ້ວ່າ ທຸກຄັ້ງທີ່ພາລະກິດແຫ່ງຍຸກໃໝ່ເລີ່ມຕົ້ນຂຶ້ນ ພາລະກິດນີ້ກໍຖືກປະຕິບັດໂດຍພຣະເຈົ້າດ້ວຍຕົວພຣະອົງເອງ ເຊິ່ງພຣະອົງນຳພາຍຸກທັງໝົດ ແລະ ເປີດເສັ້ນທາງໃໝ່ໃຫ້ກັບບັນດາມວນມະນຸດຊາດ. ເຊົ້າມືດຂອງຍຸກໃໝ່ແຕ່ລະຍຸກແມ່ນການເລີ່ມຕົ້ນໃໝ່ໃນສົງຄາມກັບຊາຕານ ເຊິ່ງມະນຸດຈະເຂົ້າສູ່ອານາຈັກທີ່ໃໝ່ກວ່າ ແລະ ສວຍງາມກວ່າ ແລະ ສູ່ຍຸກໃໝ່ທີ່ນຳພາໂດຍພຣະເຈົ້າດ້ວຍຕົວພຣະອົງເອງ. ມະນຸດເປັນເຈົ້ານາຍຂອງທຸກສິ່ງ ແຕ່ຄົນທີ່ຖືກຮັບຈະກາຍເປັນໝາກຜົນຂອງສົງຄາມກັບຊາຕານທັງໝົດ. ຊາຕານເປັນຜູ້ເຮັດໃຫ້ທຸກສິ່ງຢ່າງເສື່ອມຊາມ, ມັນເປັນຜູ້ພ່າຍແພ້ໃນເວລາສຸດທ້າຍຂອງສົງຄາມທັງໝົດ ແລະ ຍັງເປັນຜູ້ທີ່ຈະຖືກລົງໂທດຫຼັງຈາກສົງຄາມເຫຼົ່ານີ້. ທ່າມກາງພຣະເຈົ້າ, ມະນຸດ ແລະ ຊາຕານ ຈະມີພຽງແຕ່ຊາຕານ ທີ່ຈະເປັນຜູ້ທີ່ຖືກກຽດຊັງ ແລະ ຖືກປະຕິເສດ. ໃນຂະນະດຽວກັນ ຄົນທີ່ຖືກຊາຕານຮັບເອົາ ແຕ່ບໍ່ໄດ້ຖືກພຣະເຈົ້າຮັບເອົາຄືນກໍຈະກາຍເປັນຄົນທີ່ຈະໄດ້ຮັບການລົງໂທດແທນຊາຕານ. ໃນສາມຝ່າຍນີ້ ມີພຽງແຕ່ພຣະເຈົ້າທີ່ຄວນໄດ້ຮັບການນະມັດສະການຈາກທຸກສິ່ງຢ່າງ. ໃນຂະນະດຽວກັນ ຄົນທີ່ຖືກຊາຕານເຮັດໃຫ້ເສື່ອມຊາມແຕ່ຖືກພຣະເຈົ້າຮັບເອົາຄືນ ແລະ ຄົນທີ່ປະຕິບັດຕາມຫົນທາງຂອງພຣະເຈົ້າກໍຈະກາຍເປັນຄົນທີ່ຈະໄດ້ຮັບຄຳສັນຍາຂອງພຣະເຈົ້າ ແລະ ຈະພິພາກສາຄົນທີ່ຊົ່ວຊ້າແທນພຣະເຈົ້າ. ພຣະເຈົ້າຈະມີໄຊຊະນະຢ່າງແນ່ນອນ ແລະ ຊາຕານຈະພ່າຍແພ້ຢ່າງແນ່ນອນ ແຕ່ທ່າມກາງມະນຸດກໍຈະມີຄົນທີ່ຈະຊະນະ ແລະ ຄົນທີ່ຈະເສຍ. ຄົນທີ່ຊະນະຈະຢູ່ກັບຜູ້ຊະນະ ແລະ ຄົນທີ່ເສຍກໍຈະຢູ່ກັບຜູ້ພ່າຍແພ້; ນີ້ຄືການຈັດແບ່ງແຕ່ລະຄົນອອກໂດຍອີງຕາມປະເພດ ເຊິ່ງມັນແມ່ນຜົນໄດ້ຮັບສຸດທ້າຍຂອງພາລະກິດ

ທັງໝົດຂອງພຣະເຈົ້ານັ້ນ, ມັນຍັງເປັນເປົ້າໝາຍຂອງພາລະກິດທັງໝົດຂອງພຣະເຈົ້າ ແລະ ມັນຈະບໍ່ມີປ່ຽນແປງຈັກເທື່ອ. ຫົວໃຈຫຼັກຂອງພາລະກິດຫຼັກແຫ່ງແຜນການຄຸ້ມຄອງຂອງພຣະເຈົ້າແມ່ນແນໃສ່ຄວາມລອດພົ້ນຂອງມະນຸດ ແລະ ພຣະເຈົ້າກາຍມາເປັນເນື້ອໜັງຫຼັກໆກໍເພື່ອຜົນປະໂຫຍດຂອງຫົວໃຈຫຼັກນີ້, ເພື່ອຜົນປະໂຫຍດຂອງພາລະກິດນີ້ ແລະ ເພື່ອເອົາຊະນະຊາຕານ. ຄັ້ງທຳອິດທີ່ພຣະເຈົ້າກາຍມາເປັນເນື້ອໜັງກໍເພື່ອເອົາຊະນະຊາຕານເຊັ່ນດຽວກັນ ນັ້ນກໍຄື ພຣະອົງກາຍມາເປັນເນື້ອໜັງດ້ວຍຕົວພຣະອົງເອງ ແລະ ຖືກຄຶງທີ່ໄມ້ກາງແຂນດ້ວຍຕົວພຣະອົງເອງ ເພື່ອເຮັດໃຫ້ພາລະກິດຂອງສົງຄາມຄັ້ງທຳອິດສຳເລັດ ເຊິ່ງເປັນພາລະກິດແຫ່ງການໄຖ່ມະນຸດຊາດ. ໃນທຳນອງດຽວກັນ ຂັ້ນຕອນນີ້ຂອງພາລະກິດຖືກປະຕິບັດໂດຍພຣະເຈົ້າດ້ວຍຕົວພຣະອົງເອງ ຜູ້ເຊິ່ງກາຍມາເປັນເນື້ອໜັງ ເພື່ອປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດ, ເພື່ອກ່າວພຣະທຳຂອງພຣະອົງດ້ວຍຕົວພຣະອົງເອງ ແລະ ເພື່ອເຮັດໃຫ້ມະນຸດເຫັນພຣະອົງ. ແນ່ນອນ ມັນຫຼີກລ່ຽງບໍ່ໄດ້ທີ່ພຣະອົງຍັງປະຕິບັດພາລະກິດອື່ນໆໄປພ້ອມໆກັນ ແຕ່ເຫດຜົນຫຼັກທີ່ພຣະອົງປະຕິບັດພາລະກິດດ້ວຍຕົວພຣະອົງເອງແມ່ນເພື່ອເອົາຊະນະຊາຕານ, ເພື່ອເອົາຊະນະບັນດາມວນມະນຸດຊາດ ແລະ ເພື່ອຮັບຄົນເຫຼົ່ານີ້. ດ້ວຍເຫດນັ້ນພາລະກິດແຫ່ງການບັງເກີດເປັນມະນຸດຂອງພຣະເຈົ້າຈຶ່ງບໍ່ທຳມະດາ. ຖ້າເປົ້າໝາຍຂອງພຣະອົງແມ່ນພຽງແຕ່ເພື່ອສະແດງໃຫ້ມະນຸດເຫັນວ່າ ພຣະເຈົ້າຖ່ອມຕົວ ແລະ ລີ້ລັບ ແລະ ພຣະເຈົ້າເປັນຈິງ, ຖ້າມັນເປັນພຽງແຕ່ເພື່ອຜົນປະໂຫຍດໃນການປະຕິບັດພາລະກິດນີ້ ແລ້ວກໍບໍ່ມີຄວາມຈຳເປັນທີ່ຈະກາຍມາເປັນເນື້ອໜັງ. ເຖິງແມ່ນພຣະເຈົ້າບໍ່ໄດ້ກາຍມາເປັນເນື້ອໜັງ ພຣະອົງກໍສາມາດເປີດເຜີຍຄວາມຖ່ອມຕົວ ແລະ ຄວາມລີ້ລັບຂອງພຣະອົງ, ຄວາມຍິ່ງໃຫຍ່ ແລະ ຄວາມບໍລິສຸດຂອງພຣະອົງໃຫ້ກັບມະນຸດໂດຍກົງ ແຕ່ສິ່ງດັ່ງກ່າວຈະບໍ່ມີສ່ວນກ່ຽວຂ້ອງຫຍັງກັບພາລະກິດແຫ່ງການຄຸ້ມຄອງມະນຸດຊາດ. ສິ່ງເຫຼົ່ານັ້ນບໍ່ສາມາດຊ່ວຍມະນຸດ ຫຼື ເຮັດໃຫ້ເຂົາສົມບູນ ຢ່າວ່າແຕ່ຈະສາມາດເອົາຊະນະຊາຕານເລີຍ. ຖ້າການເອົາຊະນະຊາຕານພຽງແຕ່ກ່ຽວພັນເຖິງພຣະວິນຍານທີ່ເຮັດສົງຄາມກັບວິນຍານ ແລ້ວພາລະກິດດັ່ງກ່າວກໍຍິ່ງຈະມີຄຸນຄ່າທີ່ເປັນປະໂຫຍດໜ້ອຍລົງ; ມັນຈະບໍ່ສາມາດຮັບມະນຸດ ແລະ ຈະທຳລາຍໂຊກຊາຕາ ແລະ ຄວາມຄາດຫວັງຂອງມະນຸດ. ເມື່ອເປັນດັ່ງນັ້ນ ພາລະກິດຂອງພຣະເຈົ້າໃນປັດຈຸບັນກໍມີຄວາມສຳຄັນຢ່າງເລິກເຊິ່ງ. ມັນບໍ່ແມ່ນພຽງແຕ່ເພື່ອມະນຸດອາດເຫັນພຣະອົງ ຫຼື ເພື່ອຕາຂອງມະນຸດອາດຖືກເປີດ ຫຼື ເພື່ອເຮັດໃຫ້ເຂົາຮູ້ສຶກຖືກປຸກໃຈ ແລະ ໜູນໃຈເລັກນ້ອຍ; ພາລະກິດດັ່ງກ່າວບໍ່ມີຄວາມສຳຄັນເລີຍ. ຖ້າເຈົ້າພຽງແຕ່ສາມາດເວົ້າເຖິງຄວາມຮູ້ປະເພດນີ້ໄດ້ ມັນກໍພິສູດແລ້ວວ່າ ເຈົ້າບໍ່ຮູ້ຈັກຄວາມສຳຄັນທີ່ແທ້ຈິງຂອງການບັງເກີດເປັນມະນຸດຂອງພຣະເຈົ້າ.

ພາລະກິດແຫ່ງແຜນການຄຸ້ມຄອງທັງໝົດຂອງພຣະເຈົ້າແມ່ນຖືກປະຕິບັດໂດຍພຣະເຈົ້າເອງ. ຂັ້ນຕອນທຳອິດ ເຊິ່ງເປັນການສ້າງໂລກ ຖືກປະຕິບັດໂດຍພຣະເຈົ້າເອງ ແລະ ຖ້າບໍ່ເປັນດັ່ງນັ້ນ ກໍບໍ່ມີໃຜສາມາດສ້າງມະນຸດຊາດໄດ້; ຂັ້ນຕອນທີສອງແມ່ນການໄຖ່ມະນຸດຊາດທັງປວງ ແລະ ມັນກໍຖືກປະຕິບັດດ້ວຍຕົວພຣະອົງເອງ; ຂັ້ນຕອນທີສາມເປັນທີ່ແນ່ຊັດແລ້ວວ່າ ມີຄວາມຕ້ອງການທີ່ຫຼາຍຂຶ້ນສຳລັບເວລາສຸດທ້າຍຂອງທຸກພາລະກິດຂອງພຣະເຈົ້າທີ່ຖືກປະຕິບັດດ້ວຍຕົວພຣະອົງເອງ. ພາລະກິດ

ແຫ່ງການໄຖ່, ການເອົາຊະນະ, ການຮັບ ແລະ ການເຮັດໃຫ້ບັນດາມວນມະນຸດຊາດສົມບູນແມ່ນຖືກປະຕິບັດໂດຍພຣະເຈົ້າເອງ. ຖ້າພຣະອົງບໍ່ໄດ້ປະຕິບັດພາລະກິດນີ້ດ້ວຍຕົວພຣະອົງເອງ ແລ້ວມະນຸດກໍບໍ່ສາມາດເປັນຕົວແທນໃຫ້ກັບຕົວຕົນຂອງພຣະອົງໄດ້ ຫຼື ມະນຸດບໍ່ສາມາດປະຕິບັດພາລະກິດຂອງພຣະອົງໄດ້. ເພື່ອທີ່ຈະເອົາຊະນະຊາຕານ, ເພື່ອທີ່ຈະຮັບມະນຸດຊາດ ແລະ ເພື່ອທີ່ຈະມອບຊີວິດປົກກະຕິໃຫ້ກັບມະນຸດເທິງແຜ່ນດິນໂລກ, ພຣະອົງແມ່ນນຳພາມະນຸດດ້ວຍຕົວພຣະອົງເອງ ແລະປະຕິບັດພາລະກິດທ່າມກາງມະນຸດດ້ວຍຕົວພຣະອົງເອງ; ເພື່ອຜົນປະໂຫຍດແຫ່ງແຜນການຄຸ້ມຄອງທັງໝົດຂອງພຣະອົງ ແລະ ເພື່ອພາລະກິດທັງໝົດຂອງພຣະອົງ, ພຣະອົງຈຶ່ງຕ້ອງປະຕິບັດພາລະກິດນີ້ດ້ວຍຕົວພຣະອົງເອງ. ຖ້າມະນຸດພຽງແຕ່ເຊື່ອວ່າ ພຣະເຈົ້າມາເພື່ອໃຫ້ເຂົາສາມາດເຫັນ ແລະ ເພື່ອເຮັດໃຫ້ເຂົາມີຄວາມສຸກ ແລ້ວຄວາມເຊື່ອດັ່ງກ່າວບໍ່ມີຄຸນຄ່າໃດເລີຍ, ພວກມັນບໍ່ມີຄວາມສຳຄັນເລີຍ. ຄວາມຮູ້ຂອງມະນຸດບໍ່ເລິກເຊິ່ງປານໃດ! ມີພຽງແຕ່ການປະຕິບັດພາລະກິດນັ້ນດ້ວຍຕົວພຣະອົງເອງ ພຣະເຈົ້າຈຶ່ງຈະສາມາດປະຕິບັດພາລະກິດຢ່າງທົ່ວເຖິງ ແລະ ສົມບູນ. ມະນຸດບໍ່ສາມາດປະຕິບັດພາລະກິດນັ້ນແທນພຣະອົງໄດ້. ຍ້ອນເຂົາບໍ່ມີຕົວຕົນຂອງພຣະເຈົ້າ ຫຼື ແກ່ນແທ້ຂອງພຣະອົງ, ເຂົາກໍບໍ່ສາມາດປະຕິບັດພາລະກິດຂອງພຣະອົງໄດ້ ແລະ ເຖິງແມ່ນມະນຸດໄດ້ປະຕິບັດ ມັນກໍຈະບໍ່ມີຜົນຕາມມາເລີຍ. ຄັ້ງທຳອິດທີ່ພຣະເຈົ້າກາຍມາເປັນເນື້ອໜັງກໍແມ່ນເພື່ອຜົນປະໂຫຍດແຫ່ງການໄຖ່ ເພື່ອໄຖ່ບັນດາມະນຸດຊາດອອກຈາກຄວາມບາບ, ເພື່ອເຮັດໃຫ້ມະນຸດສາມາດໄດ້ຮັບການຊຳລະລ້າງ ແລະ ໄດ້ຮັບການອະໄພຈາກຄວາມບາບຂອງເຂົາ. ພາລະກິດແຫ່ງການເອົາຊະນະແມ່ນຖືກປະຕິບັດທ່າມກາງມະນຸດໂດຍພຣະເຈົ້າເອງເຊັ່ນດຽວກັນ. ໃນລະຫວ່າງຂັ້ນຕອນນີ້ ຖ້າພຣະເຈົ້າພຽງແຕ່ຕ້ອງກ່າວຄຳທຳນາຍ ແລ້ວຜູ້ປະກາດພຣະທຳ ຫຼື ບາງຄົນທີ່ມີພອນສະຫວັນກໍສາມາດເຮັດໜ້າທີ່ແທນພຣະອົງໄດ້; ຖ້າມີພຽງແຕ່ກ່າວຄຳທຳນາຍ ມະນຸດກໍສາມາດເຮັດແທນພຣະເຈົ້າໄດ້. ແຕ່ຖ້າມະນຸດຕ້ອງປະຕິບັດພາລະກິດຂອງພຣະເຈົ້າດ້ວຍຕົວເຂົາເອງ ແລະ ຕ້ອງປະຕິບັດພາລະກິດໃນຊີວິດຂອງມະນຸດ ມັນກໍຈະເປັນໄປບໍ່ໄດ້ທີ່ເຂົາຈະປະຕິບັດພາລະກິດນີ້. ມັນຕ້ອງຖືກປະຕິບັດໂດຍພຣະເຈົ້າເອງນັ້ນກໍຄື ພຣະເຈົ້າຕ້ອງກາຍມາເປັນເນື້ອໜັງດ້ວຍຕົວພຣະອົງເອງເພື່ອປະຕິບັດພາລະກິດນີ້. ໃນຍຸກແຫ່ງພຣະທຳ ຖ້າມີພຽງແຕ່ການກ່າວຄຳທຳນາຍ ແລ້ວເອຊາຢາ ຫຼື ເອລີຢາກໍສາມາດປະຕິບັດພາລະກິດນີ້ ແລະ ກໍຈະບໍ່ມີຄວາມຕ້ອງການໃຫ້ພຣະເຈົ້າປະຕິບັດດ້ວຍຕົວພຣະອົງເອງ. ຍ້ອນພາລະກິດທີ່ປະຕິບັດໃນຂັ້ນຕອນນີ້ບໍ່ແມ່ນພຽງແຕ່ການກ່າວຄຳທຳນາຍ ແລະ ຍ້ອນມັນເປັນສິ່ງທີ່ສຳຄັນຫຼາຍທີ່ພາລະກິດແຫ່ງພຣະທຳຖືກນຳໃຊ້ເພື່ອເອົາຊະນະມະນຸດ ແລະ ເຮັດໃຫ້ຊາຕານພ່າຍແພ້ມະນຸດຈຶ່ງບໍ່ສາມາດປະຕິບັດພາລະກິດນີ້ໄດ້ ແລະ ມັນຕ້ອງຖືກປະຕິບັດໂດຍພຣະເຈົ້າດ້ວຍຕົວພຣະອົງເອງ. ໃນຍຸກແຫ່ງພຣະບັນຍັດ ພຣະເຢໂຮວາປະຕິບັດສ່ວນຂອງພາລະກິດຂອງພຣະເຈົ້າຫຼັງຈາກນັ້ນພຣະອົງກໍກ່າວພຣະທຳບາງຂໍ້ ແລະ ປະຕິບັດພາລະກິດຜ່ານຜູ້ປະກາດພຣະທຳ. ນັ້ນກໍຍ້ອນມະນຸດສາມາດປະຕິບັດພາລະກິດຂອງພຣະເຢໂຮວາ ແລະ ຜູ້ທຳນາຍສາມາດພະຍາກອນລ່ວງໜ້າເຖິງສິ່ງຕ່າງໆ ແລະ ຕີຄວາມໝາຍຄວາມຝັນບາງຢ່າງແທນພຣະອົງໄດ້. ພາລະກິດທີ່ປະຕິບັດໃນຕອນ

ເລີ່ມຕົ້ນບໍ່ແມ່ນພາລະກິດໃນການປ່ຽນແປງອຸປະນິໄສຂອງມະນຸດໂດຍກົງ ແລະ ບໍ່ກ່ຽວຂ້ອງກັບຄວາມບາບຂອງມະນຸດ ແລະ ມະນຸດຖືກຮຽກຮ້ອງໃຫ້ພຽງແຕ່ປະຕິບັດຕາມພຣະບັນຍັດເທົ່ານັ້ນ. ດ້ວຍເຫດນັ້ນ ພຣະເຢໂຮວາຈຶ່ງບໍ່ໄດ້ກາຍມາເປັນເນື້ອໜັງ ແລະ ເປີດເຜີຍພຣະອົງເອງໃຫ້ກັບມະນຸດ; ກົງກັນຂ້າມພຣະອົງກ່າວຕໍ່ໂມເຊ ແລະ ຄົນອື່ນໆໂດຍກົງ, ເຮັດໃຫ້ພວກເຂົາກ່າວ ແລະ ປະຕິບັດພາລະກິດແທນພຣະອົງ ແລະ ເຮັດໃຫ້ພວກເຂົາປະຕິບັດພາລະກິດທ່າມກາງມະນຸດຊາດໂດຍກົງ. ຂັ້ນຕອນທຳອິດຂອງພາລະກິດຂອງພຣະເຈົ້າແມ່ນການນຳພາມະນຸດ. ມັນເປັນຈຸດເລີ່ມຕົ້ນຂອງສົງຄາມກັບຊາຕານ ແຕ່ສົງຄາມນີ້ກໍຍັງບໍ່ໄດ້ເລີ່ມຕົ້ນຢ່າງເປັນທາງການ. ສົງຄາມທີ່ເປັນທາງການກັບຊາຕານເລີ່ມຕົ້ນດ້ວຍການບັງເກີດເປັນມະນຸດຂອງພຣະເຈົ້າຄັ້ງທຳອິດ ແລະ ມັນໄດ້ສືບຕໍ່ຈົນມາເຖິງປັດຈຸບັນ. ການຕໍ່ສູ້ຄັ້ງທຳອິດຂອງສົງຄາມນີ້ກໍຄືຕອນທີ່ພຣະເຈົ້າຜູ້ບັງເກີດເປັນມະນຸດຖືກຄຶງທີ່ໄມ້ກາງແຂນ. ການຄຶງພຣະເຈົ້າຜູ້ບັງເກີດເປັນມະນຸດທີ່ໄມ້ກາງແຂນໄດ້ເອົາຊະນະຊາຕານ ແລະ ມັນເປັນຂັ້ນຕອນທຳອິດໃນສົງຄາມທີ່ປະສົບຜົນສຳເລັດ. ເມື່ອພຣະເຈົ້າທີ່ບັງເກີດເປັນມະນຸດເລີ່ມຕົ້ນປະຕິບັດພາລະກິດໃນຊີວິດຂອງມະນຸດໂດຍກົງ, ນີ້ຄືການເລີ່ມຕົ້ນທີ່ເປັນທາງການຂອງພາລະກິດແຫ່ງການຮັບມະນຸດຄືນ ແລະ ຍ້ອນນີ້ແມ່ນພາລະກິດແຫ່ງການປ່ຽນແປງອຸປະນິໄສທີ່ເກົ່າແກ່ຂອງມະນຸດ ມັນຈຶ່ງເປັນພາລະກິດແຫ່ງການເຮັດສົງຄາມກັບຊາຕານ. ເຊິ່ງຂັ້ນຕອນຂອງພາລະກິດທີ່ຖືກປະຕິບັດໂດຍພຣະເຢໂຮວາໃນຕອນເລີ່ມຕົ້ນແມ່ນພຽງແຕ່ການນຳພາຊີວິດຂອງມະນຸດເທິງແຜ່ນດິນໂລກ. ມັນເປັນຄືການເລີ່ມພາລະກິດຂອງພຣະເຈົ້າ ແລະ ເຖິງແມ່ນວ່າ ມັນຍັງບໍ່ກ່ຽວພັນເຖິງສົງຄາມໃດກໍຕາມ ຫຼື ພາລະກິດຫຼັກໆໃດກໍຕາມມັນກໍໄດ້ວາງພື້ນຖານໃຫ້ກັບພາລະກິດແຫ່ງສົງຄາມທີ່ຈະມາເຖິງ. ຫຼັງຈາກນັ້ນ ຂັ້ນຕອນທີສອງຂອງພາລະກິດໃນລະຫວ່າງຍຸກແຫ່ງພຣະຄຸນແມ່ນກ່ຽວພັນເຖິງການປ່ຽນແປງອຸປະນິໄສທີ່ເກົ່າແກ່ຂອງມະນຸດ ເຊິ່ງໝາຍຄວາມວ່າ ພຣະເຈົ້າເອງໄດ້ສ້າງຊີວິດຂອງມະນຸດຂຶ້ນ. ນີ້ກໍຕ້ອງຖືກປະຕິບັດໂດຍພຣະເຈົ້າເອງ ນັ້ນກໍຄື ມັນຈຳເປັນທີ່ພຣະເຈົ້າຈະກາຍມາເປັນເນື້ອໜັງດ້ວຍຕົວພຣະອົງເອງ. ຖ້າພຣະອົງບໍ່ໄດ້ກາຍມາເປັນເນື້ອໜັງ ກໍບໍ່ມີໃຜທີ່ສາມາດແທນພຣະອົງໄດ້ໃນຂັ້ນຕອນນີ້ຂອງພາລະກິດ ຍ້ອນມັນສະແດງເຖິງພາລະກິດແຫ່ງການຕໍ່ສູ້ກັບຊາຕານໂດຍກົງ. ຖ້າມະນຸດປະຕິບັດພາລະກິດນີ້ແທນພຣະເຈົ້າ, ເມື່ອມະນຸດຢືນຢູ່ຕໍ່ໜ້າຊາຕານ, ຊາຕານຈະບໍ່ຍອມພ່າຍແພ້ ແລະ ມັນຈະເປັນໄປບໍ່ໄດ້ທີ່ຈະເອົາຊະນະຊາຕານ. ຕ້ອງເປັນພຣະເຈົ້າທີ່ບັງເກີດເປັນມະນຸດຜູ້ເຊິ່ງມາເພື່ອເອົາຊະນະຊາຕານ ຍ້ອນແກ່ນແທ້ຂອງພຣະເຈົ້າທີ່ບັງເກີດເປັນມະນຸດຍັງຄົງມີຄວາມເປັນພຣະເຈົ້າ, ພຣະອົງຍັງເປັນຊີວິດຂອງມະນຸດ ແລະພຣະອົງຍັງເປັນພຣະຜູ້ສ້າງ; ບໍ່ວ່າແມ່ນຫຍັງກໍຕາມຈະເກີດຂຶ້ນ ຕົວຕົນ ແລະ ແກ່ນແທ້ຂອງພຣະອົງຈະບໍ່ປ່ຽນແປງໄປ. ດ້ວຍເຫດນັ້ນ ພຣະອົງຈຶ່ງສວມໃສ່ເນື້ອໜັງ ແລະ ປະຕິບັດພາລະກິດເພື່ອເຮັດໃຫ້ຊາຕານຍອມແພ້ຢ່າງສົມບູນ. ໃນລະຫວ່າງຂັ້ນຕອນຂອງພາລະກິດໃນຍຸກສຸດທ້າຍ ຖ້າມະນຸດຕ້ອງປະຕິບັດພາລະກິດນີ້ ແລະ ຖືກສ້າງໃຫ້ກ່າວພຣະທຳໂດຍກົງ ແລ້ວເຂົາກໍຈະບໍ່ສາມາດກ່າວພຣະທຳເຫຼົ່ານັ້ນໄດ້ ແລະ ຖ້າກ່າວເຖິງການທຳນາຍ ແລ້ວຄຳທຳນາຍນີ້ກໍຈະບໍ່ສາມາດເອົາຊະນະມະນຸດໄດ້. ດ້ວຍການຮັບເອົາເນື້ອໜັງ ພຣະເຈົ້າຈຶ່ງມາເພື່ອເອົາຊະນະຊາຕານ ແລະ ເຮັດໃຫ້ການຍອມແພ້ຂອງມັນ

ສົມບູນ. ເມື່ອພຣະອົງເອົາຊະນະຊາຕານຢ່າງເດັດຂາດ, ເອົາຊະນະມະນຸດຢ່າງສິ້ນເຊີງ ແລະ ຮັບມະນຸດຢ່າງສົມບູນ, ຂັ້ນຕອນນີ້ຂອງພາລະກິດຈະຖືກເຮັດໃຫ້ສຳເລັດ ແລະ ຈະບັນລຸຄວາມສຳເລັດ. ໃນການຄຸ້ມຄອງຂອງພຣະເຈົ້າ ມະນຸດບໍ່ສາມາດເຮັດແທນພຣະອົງໄດ້. ໂດຍສະເພາະແລ້ວ ພາລະກິດແຫ່ງການນຳພາຍຸກ ແລະ ການເລີ່ມຕົ້ນພາລະກິດໃໝ່ກໍຍິ່ງມີຄວາມຕ້ອງການຫຼາຍຂຶ້ນໃຫ້ພຣະເຈົ້າປະຕິບັດດ້ວຍຕົວພຣະອົງເອງ. ການເປີດເຜີຍໃຫ້ກັບມະນຸດ ແລະ ການຈັດກຽມມະນຸດພ້ອມກັບຄຳທຳນາຍແມ່ນສາມາດຖືກປະຕິບັດໄດ້ໂດຍມະນຸດ ແຕ່ຖ້າເປັນພາລະກິດທີ່ຕ້ອງຖືກປະຕິບັດໂດຍພຣະເຈົ້າ ເຊິ່ງເປັນພາລະກິດແຫ່ງສົງຄາມລະຫວ່າງພຣະເຈົ້າເອງ ແລະ ຊາຕານ, ພາລະກິດນີ້ກໍຈະບໍ່ສາມາດຖືກປະຕິບັດໂດຍມະນຸດ. ໃນລະຫວ່າງຂັ້ນຕອນທຳອິດຂອງພາລະກິດ ເມື່ອຍັງບໍ່ມີສົງຄາມກັບຊາຕານ ພຣະເຢໂຮວາໄດ້ນຳພາປະຊາຊົນອິດສະຣາເອນດ້ວຍຕົວພຣະອົງເອງໂດຍການໃຊ້ຄຳທຳນາຍທີ່ຜູ້ປະກາດພຣະທຳກ່າວໄວ້. ຫຼັງຈາກນັ້ນ ຂັ້ນຕອນທີສອງຂອງພາລະກິດແມ່ນການເຮັດສົງຄາມກັບຊາຕານ ແລະ ພຣະເຈົ້າກໍໄດ້ກາຍມາເປັນເນື້ອໜັງດ້ວຍຕົວພຣະອົງເອງ ໂດຍການເຂົ້າມາຢູ່ໃນເນື້ອໜັງເພື່ອປະຕິບັດພາລະກິດນີ້. ສິ່ງໃດກໍຕາມທີ່ກ່ຽວພັນເຖິງສົງຄາມກັບຊາຕານ ແມ່ນຍັງກ່ຽວພັນເຖິງການບັງເກີດເປັນມະນຸດຂອງພຣະເຈົ້າ ເຊິ່ງໝາຍຄວາມວ່າ ມະນຸດບໍ່ສາມາດສູ້ຮົບໃນສົງຄາມນີ້. ຖ້າມະນຸດຕ້ອງເຮັດສົງຄາມ ເຂົາຈະບໍ່ສາມາດເອົາຊະນະຊາຕານໄດ້. ເຂົາຈະມີກຳລັງເພື່ອຕໍ່ສູ້ກັບຊາຕານໄດ້ແນວໃດ ໃນຂະນະທີ່ຍັງຢູ່ພາຍໃຕ້ອຳນາດຂອງມັນ? ມະນຸດຢູ່ທາງກາງ ນັ້ນກໍຄື ຖ້າເຈົ້າອ່ຽງໄປທາງຊາຕານ ເຈົ້າກໍຈະເປັນຂອງຊາຕານ ແຕ່ຖ້າເຈົ້າເຮັດໃຫ້ພຣະເຈົ້າພໍໃຈ ເຈົ້າກໍຈະເປັນຂອງພຣະເຈົ້າ. ຖ້າມະນຸດຕ້ອງປະຕິບັດພາລະກິດແຫ່ງສົງຄາມນີ້ແທນພຣະເຈົ້າ ເຂົາຈະສາມາດປະຕິບັດມັນໄດ້ບໍ? ຖ້າເຂົາປະຕິບັດ ເຂົາຈະບໍ່ຈິບຫາຍຕັ້ງແຕ່ດົນນານມາແລ້ວບໍ? ເຂົາຈະບໍ່ໄດ້ເຂົ້າສູ່ໂລກເບື້ອງລຸ່ມເປັນເວລາດົນນານມາແລ້ວບໍ? ດ້ວຍເຫດນັ້ນ ມະນຸດຈະບໍ່ສາມາດແທນພຣະເຈົ້າໃນພາລະກິດຂອງພຣະອົງໄດ້ ເຊິ່ງເວົ້າໄດ້ວ່າ ມະນຸດບໍ່ມີແກ່ນແທ້ຂອງພຣະເຈົ້າ ແລະ ຖ້າເຈົ້າເຮັດສົງຄາມກັບຊາຕານ ເຈົ້າກໍຈະບໍ່ສາມາດເອົາຊະນະມັນໄດ້. ມະນຸດພຽງແຕ່ສາມາດປະຕິບັດບາງພາລະກິດ; ເຂົາສາມາດເອົາຊະນະບາງຜູ້ຄົນ ແຕ່ເຂົາບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າແທນພຣະເຈົ້າໄດ້. ມະນຸດສາມາດເຮັດສົງຄາມກັບຊາຕານໄດ້ແນວໃດ? ເຊິ່ງຊາຕານຈະຈັບເຈົ້າເປັນຊະເລີຍກ່ອນທີ່ເຈົ້າຈະເລີ່ມຕົ້ນດ້ວຍຊໍ້າ. ພຽງແຕ່ເມື່ອພຣະເຈົ້າເຮັດສົງຄາມກັບຊາຕານ ແລະ ມະນຸດຕິດຕາມ ແລະ ເຊື່ອຟັງພຣະເຈົ້າໂດຍຢູ່ໃນພື້ນຖານນີ້ ມະນຸດຈຶ່ງຈະສາມາດຖືກພຣະເຈົ້າຮັບເອົາ ແລະ ຫຼົບໜີອອກຈາກການເປັນທາດຂອງຊາຕານ. ສິ່ງທີ່ມະນຸດສາມາດບັນລຸໄດ້ດ້ວຍສະຕິປັນຍາ ແລະ ຄວາມສາມາດຂອງເຂົາເອງກໍມີຈຳກັດຫຼາຍ; ເຂົາບໍ່ສາມາດເຮັດໃຫ້ມະນຸດສົມບູນ, ບໍ່ສາມາດນຳພາເຂົາ ແລະ ຍິ່ງໄປກວ່ານັ້ນກໍຄືບໍ່ສາມາດເອົາຊະນະຊາຕານໄດ້. ຄວາມສະຫຼາດ ແລະ ສະຕິປັນຍາຂອງມະນຸດບໍ່ສາມາດຂັດຂວາງແຜນການຂອງຊາຕານໄດ້ ແລ້ວມະນຸດຈະສາມາດເຮັດສົງຄາມກັບມັນໄດ້ແນວໃດ?

ທຸກຄົນທີ່ເຕັມໃຈໃນການຖືກເຮັດໃຫ້ສົມບູນມີຊ່ອງທາງໃນການຖືກເຮັດໃຫ້ສົມບູນ ສະນັ້ນທຸກຄົນຕ້ອງຜ່ອນຄາຍ ນັ້ນກໍຄື ໃນອະນາຄົດ ພວກເຈົ້າທັງໝົດຈະເຂົ້າສູ່ປາຍທາງດັ່ງກ່າວ. ແຕ່ຖ້າເຈົ້າ

ບໍ່ເຕັມໃຈໃນການຖືກເຮັດໃຫ້ສົມບູນ ແລະ ບໍ່ເຕັມໃຈທີ່ຈະເຂົ້າສູ່ອານາຈັກທີ່ມະຫັດສະຈັນ, ນັ້ນກໍຈະແມ່ນບັນຫາຂອງເຈົ້າ. ທຸກຄົນທີ່ເຕັມໃຈໃນການຖືກເຮັດໃຫ້ສົມບູນ ແລະ ຊື່ສັດກັບພຣະເຈົ້າ, ທຸກຄົນທີ່ເຊື່ອຟັງ ແລະ ທຸກຄົນທີ່ປະຕິບັດໜ້າທີ່ຂອງພວກເຂົາຢ່າງສັດຊື່ ເຊິ່ງ ທຸກຄົນທີ່ກ່າວມາທັງໝົດນັ້ນສາມາດຖືກເຮັດໃຫ້ສົມບູນໄດ້. ໃນປັດຈຸບັນ ທຸກຄົນທີ່ປະຕິບັດໜ້າທີ່ຂອງພວກເຂົາຢ່າງບໍ່ສັດຊື່, ທຸກຄົນທີ່ບໍ່ຊື່ສັດກັບພຣະເຈົ້າ, ທຸກຄົນທີ່ບໍ່ຍອມຢູ່ພາຍໃຕ້ພຣະເຈົ້າ ໂດຍສະເພາະຄົນທີ່ໄດ້ຮັບແສງສະຫວ່າງ ແລະ ແສງເຍືອງທາງຈາກພຣະວິນຍານບໍລິສຸດ ແຕ່ບໍ່ນຳເຂົ້າສູ່ການປະຕິບັດ ເຊິ່ງທຸກຄົນທີ່ກ່າວມາທັງໝົດນັ້ນຈະບໍ່ສາມາດຖືກເຮັດໃຫ້ສົມບູນ. ທຸກຄົນທີ່ເຕັມໃຈຊື່ສັດ ແລະ ເຊື່ອຟັງພຣະເຈົ້າແມ່ນສາມາດຖືກເຮັດໃຫ້ສົມບູນໄດ້ ເຖິງແມ່ນວ່າພວກເຂົາຈະມີຄວາມຮູ້ພຽງໜ້ອຍດຽວ; ທຸກຄົນທີ່ເຕັມໃຈສະແຫວງຫາກໍສາມາດຖືກເຮັດໃຫ້ສົມບູນໄດ້. ບໍ່ຈຳເປັນຕ້ອງກັງວົນກ່ຽວກັບສິ່ງນີ້. ຕາບໃດທີ່ເຈົ້າເຕັມໃຈສະແຫວງຫາໃນແນວທາງນີ້ ເຈົ້າກໍຈະສາມາດຖືກເຮັດໃຫ້ສົມບູນໄດ້. ເຮົາບໍ່ເຕັມໃຈທີ່ຈະປະຖິ້ມ ຫຼື ກຳຈັດຄົນໃດຄົນໜຶ່ງໃນພວກເຈົ້າ ແຕ່ຖ້າມະນຸດບໍ່ພະຍາຍາມເຮັດດີ, ເຈົ້າກໍພຽງແຕ່ຈະທຳລາຍຕົວເຈົ້າເອງ; ມັນບໍ່ແມ່ນເຮົາທີ່ກຳຈັດເຈົ້າ ແຕ່ເປັນຕົວເຈົ້າເອງ. ຖ້າເຈົ້າບໍ່ພະຍາຍາມເຮັດດີດ້ວຍຕົວເຈົ້າເອງ ນັ້ນກໍຄື ຖ້າເຈົ້າຂີ້ຄ້ານ ຫຼື ບໍ່ປະຕິບັດໜ້າທີ່ຂອງເຈົ້າ ຫຼື ບໍ່ສັດຊື່ ຫຼື ບໍ່ສະແຫວງຫາຄວາມຈິງ ແລະ ເຮັດໃນສິ່ງທີ່ເຈົ້າຢາກເຮັດ, ຖ້າເຈົ້າປະພຶດຕົວຢ່າງບໍ່ລະວັງ, ຕໍ່ສູ້ເພື່ອຊື່ສຽງ ແລະ ຊັບສິນຂອງເຈົ້າເອງ ແລະ ບໍ່ຄຳນຶງເຖິງສິນທຳເວລາທີ່ຕິດຕໍ່ກັບເພດກົງຂ້າມ, ເຈົ້າກໍຈະແບກຮັບພາລະແຫ່ງຄວາມບາບຂອງເຈົ້າເອງ; ເຈົ້າບໍ່ສົມຄວນທີ່ຈະໄດ້ຮັບການສົງສານຈາກຄົນໃດເລີຍ. ເປົ້າໝາຍຂອງເຮົາແມ່ນເພື່ອພວກເຈົ້າທຸກຄົນຈະໄດ້ຖືກເຮັດໃຫ້ສົມບູນ ແລະ ຢ່າງໜ້ອຍກໍຖືກເອົາຊະນະ ເພື່ອໃຫ້ຂັ້ນຕອນນີ້ຂອງພາລະກິດຖືກເຮັດໃຫ້ສຳເລັດຢ່າງຄົບຖ້ວນ. ຄວາມປາຖະໜາຂອງພຣະເຈົ້າສຳລັບທຸກຄົນແມ່ນເພື່ອໃຫ້ທຸກຄົນຖືກເຮັດໃຫ້ສົມບູນ, ເພື່ອຖືກຮັບໂດຍພຣະອົງໃນທີ່ສຸດ, ເພື່ອຖືກຊຳລະລ້າງໂດຍພຣະອົງຢ່າງສົມບູນ ແລະ ເພື່ອກາຍເປັນຄົນທີ່ພຣະອົງຮັກ. ມັນບໍ່ສຳຄັນທີ່ເຮົາຈະເວົ້າວ່າພວກເຈົ້າເປັນຄົນຫຼ້າຫຼັງ ຫຼື ມີຄວາມສາມາດຕໍ່າ ເຊິ່ງສິ່ງນີ້ກໍເປັນຄວາມຈິງທັງໝົດ. ການທີ່ເຮົາເວົ້າແບບນີ້ບໍ່ໄດ້ພິສູດວ່າ ເຮົາເຈດຕະນາທີ່ຈະປະຖິ້ມເຈົ້າ ຫຼື ເຮົາສູນເສຍຄວາມຫວັງໃນພວກເຈົ້າ ຢ່າວ່າແຕ່ເຮົາບໍ່ເຕັມໃຈທີ່ຈະຊ່ວຍພວກເຈົ້າເລີຍ. ໃນປັດຈຸບັນ ເຮົາໄດ້ມາເພື່ອປະຕິບັດພາລະກິດແຫ່ງຄວາມລອດພົ້ນຂອງພວກເຈົ້າ ເຊິ່ງເວົ້າໄດ້ວ່າ ພາລະກິດທີ່ເຮົາປະຕິບັດແມ່ນການສືບຕໍ່ຂອງພາລະກິດແຫ່ງຄວາມລອດພົ້ນ. ທຸກຄົນມີໂອກາດທີ່ຈະຖືກເຮັດໃຫ້ສົມບູນ ໂດຍມີເງື່ອນໄຂວ່າເຈົ້າຕ້ອງເຕັມໃຈ, ໂດຍມີເງື່ອນໄຂວ່າເຈົ້າຕ້ອງສະແຫວງຫາ ເຊິ່ງໃນທີ່ສຸດ ເຈົ້າກໍຈະສາມາດບັນລຸຜົນຕາມມາດັ່ງກ່າວ ແລະ ບໍ່ມີພວກເຈົ້າແມ່ນແຕ່ຄົນດຽວທີ່ຈະຖືກປະຖິ້ມ. ຖ້າເຈົ້າມີຄວາມສາມາດຕໍ່າ, ເງື່ອນໄຂຂອງເຮົາທີ່ມີຕໍ່ເຈົ້າກໍຈະສອດຄ່ອງກັບຄວາມສາມາດຕໍ່າຂອງເຈົ້າ; ຖ້າເຈົ້າມີຄວາມສາມາດສູງ, ເງື່ອນໄຂຂອງເຮົາທີ່ມີຕໍ່ເຈົ້າກໍຈະສອດຄ່ອງກັບຄວາມສາມາດສູງຂອງເຈົ້າ; ຖ້າເຈົ້າຂາດຄວາມຮູ້ ແລະ ກົກໜັງສື, ເງື່ອນໄຂຂອງເຮົາທີ່ມີຕໍ່ເຈົ້າກໍຈະສອດຄ່ອງກັບຄວາມກົກໜັງສືຂອງເຈົ້າ; ຖ້າເຈົ້າຮູ້ໜັງສື, ເງື່ອນໄຂຂອງເຮົາທີ່ມີຕໍ່ເຈົ້າກໍຈະສອດຄ່ອງກັບຄວາມຈິງທີ່ເຈົ້າຮູ້ໜັງສື; ຖ້າເຈົ້າເປັນຜູ້ອາວຸໂສ, ເງື່ອນໄຂຂອງ

ເຮົາທີ່ມີຕໍ່ເຈົ້າກໍຈະສອດຄ່ອງກັບອາຍຸຂອງເຈົ້າ; ຖ້າເຈົ້າສາມາດສະໜອງການຕ້ອນຮັບຢ່າງອົບອຸ່ນ, ເງື່ອນໄຂຂອງເຮົາທີ່ມີຕໍ່ເຈົ້າກໍຈະສອດຄ່ອງກັບຄວາມສາມາດນີ້; ຖ້າເຈົ້າເວົ້າວ່າ ເຈົ້າບໍ່ສາມາດສະເໜີການຕ້ອນຮັບຢ່າງອົບອຸ່ນ ແລະ ພຽງແຕ່ສາມາດປະຕິບັດໜ້າທີ່ບາງຢ່າງ ບໍ່ວ່າຈະເປັນການປະກາດຂ່າວປະເສີດ ຫຼື ການດູແລຄຣິດຕະຈັກ ຫຼື ການເຂົ້າຮ່ວມວຽກງານທົ່ວໄປອື່ນໆ, ຄວາມສົມບູນທີ່ເຮົາມີຕໍ່ເຈົ້າກໍຈະສອດຄ່ອງກັບໜ້າທີ່ທີ່ເຈົ້າປະຕິບັດ. ການເປັນຄົນທີ່ສັດຊື່, ເຊື່ອຟັງຈົນເຖິງທີ່ສຸດ ແລະ ສະແຫວງຫາເພື່ອຮັກພຣະເຈົ້າສູງສຸດ, ນີ້ຄືສິ່ງທີ່ເຈົ້າຕ້ອງເຮັດໃຫ້ສຳເລັດ ແລະ ບໍ່ມີການປະຕິບັດໃດທີ່ດີກວ່າທັງສາມຢ່າງນີ້. ໃນທີ່ສຸດ ມະນຸດກໍຈຳເປັນຕ້ອງບັນລຸທັງສາມສິ່ງເຫຼົ່ານີ້ ແລະ ຖ້າເຂົາສາມາດບັນລຸພວກມັນໄດ້ ເຂົາກໍຈະຖືກເຮັດໃຫ້ສົມບູນ. ແຕ່ທີ່ສຳຄັນຄື ເຈົ້າຕ້ອງສະແຫວງຫາຢ່າງແທ້ຈິງ, ເຈົ້າຕ້ອງກ້າວໄປຂ້າງໜ້າ ແລະ ຂ້າງເທິງຢ່າງຂະຫຍັນຂັນແຂງ ແລະ ຕ້ອງບໍ່ຢູ່ລ້າກັບສິ່ງນັ້ນ. ເຮົາໄດ້ກ່າວວ່າ ທຸກຄົນມີໂອກາດທີ່ຈະຖືກເຮັດໃຫ້ສົມບູນ ແລະ ສາມາດຖືກເຮັດໃຫ້ສົມບູນ ແລະ ສິ່ງນີ້ເອງກໍຄືຄວາມຈິງ, ແຕ່ ເຈົ້າບໍ່ພະຍາຍາມໃຫ້ຫຼາຍຂຶ້ນໃນການສະແຫວງຫາຂອງເຈົ້າ, ຖ້າເຈົ້າບໍ່ໄດ້ບັນລຸຕາມບັນທັດຖານທັງສາມຢ່າງນີ້, ໃນທີ່ສຸດ ເຈົ້າກໍຕ້ອງຖືກກຳຈັດ. ເຮົາຕ້ອງການໃຫ້ທຸກຄົນນຳໃຫ້ທັນ, ຕ້ອງການໃຫ້ທຸກຄົນມີພາລະກິດ ແລະ ແສງສະຫວ່າງຈາກພຣະວິນຍານບໍລິສຸດ ແລະ ສາມາດເຊື່ອຟັງຈົນເຖິງທີ່ສຸດ ຍ້ອນນີ້ຄືໜ້າທີ່ທີ່ພວກເຈົ້າແຕ່ລະຄົນຄວນປະຕິບັດ. ເມື່ອພວກເຈົ້າທຸກຄົນໄດ້ປະຕິບັດໜ້າທີ່ຂອງພວກເຈົ້າ, ພວກເຈົ້າກໍຈະຖືກເຮັດໃຫ້ສົມບູນ, ເພາະວ່າພວກເຈົ້າກໍຈະມີພະຍານທີ່ດັງສະນັ້ນເຊັ່ນດຽວກັນ. ທຸກຄົນທີ່ມີພະຍານແມ່ນຄົນທີ່ມີໄຊຊະນະເໜືອຊາຕານ ແລະ ໄດ້ຮັບຄຳສັນຍາຂອງພຣະເຈົ້າ ແລະ ພວກເຂົາແມ່ນຄົນທີ່ຈະຍັງຄົງດຳລົງຊີວິດຢູ່ໃນປາຍທາງທີ່ມະຫັດສະຈັນ.

# ພຣະເຈົ້າ ແລະ ມະນຸດຈະເຂົ້າບ່ອນພັກເຊົາພ້ອມກັນ

ໃນຕົ້ນເດີມນັ້ນ ພຣະເຈົ້າໄດ້ຢູ່ໃນຄວາມສະຫງົບ. ໃນເວລານັ້ນແມ່ນບໍ່ມີມະນຸດ ຫຼື ສິ່ງໃດຢູ່ເທິງແຜ່ນດິນໂລກ ແລະ ພຣະເຈົ້າບໍ່ໄດ້ປະຕິບັດພາລະກິດໃດທັງສິ້ນ. ພຣະອົງພຽງແຕ່ເລີ່ມພາລະກິດການຄຸ້ມຄອງຂອງພຣະອົງ ຫຼັງຈາກທີ່ເກີດມີມະນຸດ ແລະ ຫຼັງຈາກມະນຸດໄດ້ເສື່ອມຊາມ; ນັບແຕ່ນັ້ນມາ ພຣະອົງກໍບໍ່ໄດ້ຢຸດພັກເຊົາອີກເລີຍ ແຕ່ກົງກັນຂ້າມ ພຣະອົງແມ່ນເລີ່ມຫຍຸ້ງກັບການປະຕິບັດພາລະກິດຂອງພຣະອົງທ່າມກາງມະນຸດ. ເປັນຍ້ອນຄວາມເສື່ອມຊາມຂອງມະນຸດທີ່ພາໃຫ້ພຣະເຈົ້າບໍ່ໄດ້ຢຸດພັກ ແລະ ຍັງເປັນຍ້ອນການຕໍ່ຕ້ານຂອງເທວະທູດອີກດ້ວຍ. ຖ້າພຣະເຈົ້າບໍ່ເອົາຊະນະຊາຕານ ແລະ ຊ່ວຍມະນຸດຊາດທີ່ເສື່ອມຊາມໃຫ້ລອດພົ້ນ, ພຣະອົງກໍຈະບໍ່ສາມາດເຂົ້າສູ່ບ່ອນພັກເຊົາໄດ້ອີກ. ໃນເມື່ອມະນຸດບໍ່ມີຄວາມສະຫງົບ, ພຣະເຈົ້າກໍຈະບໍ່ມີຄວາມສະຫງົບເຊັ່ນກັນ ແລະ ເມື່ອພຣະເຈົ້າເຂົ້າສູ່ບ່ອນພັກເຊົາອີກຄັ້ງ, ມະນຸດກໍຈະເຂົ້າສູ່ບ່ອນພັກເຊົາເຊັ່ນກັນ. ການໃຊ້ຊີວິດຢູ່ໃນຄວາມສະຫງົບໝາຍຄວາມວ່າເປັນຊີວິດທີ່ບໍ່ມີສົງຄາມ, ບໍ່ມີຄວາມເປິເປື້ອນ ແລະ ບໍ່ມີຄວາມບໍ່ຊອບທຳຢ່າງຝັງແໜ້ນ. ນີ້ໝາຍຄວາມວ່າ ມັນເປັນຊີວິດທີ່ປາສະຈາກການຣົບກວນຂອງຊາຕານ (ໃນນີ້ “ຊາຕານ” ໝາຍເຖິງກອງກຳລັງສັດຕູ) ແລະ ປາສະຈາກຄວາມເສື່ອມຊາມຂອງຊາຕານ ຫຼື ມີຄວາມສ່ຽງຕໍ່ການຣົບກວນຂອງກອງກຳລັງໃດໆທີ່ຕໍ່ຕ້ານພຣະເຈົ້າ; ເຊິ່ງມັນເປັນຊີວິດທີ່ທຸກສິ່ງປະຕິບັດຕາມປະເພດຂອງຕົນເອງ ແລະ ສາມາດນະມັດສະການພຣະຜູ້ເປັນເຈົ້າແຫ່ງການສ້າງ; ເຊິ່ງສະຫວັນ ແລະ ແຜ່ນດິນໂລກກໍຈະເຕັມໄປດ້ວຍຄວາມສະຫງົບ. ນີ້ຄືຄວາມໝາຍຂອງພຣະທຳທີ່ວ່າ “ຊີວິດແຫ່ງການພັກເຊົາຂອງມະນຸດເອງ”. ເມື່ອພຣະເຈົ້າພັກເຊົາ ຄວາມບໍ່ຊອບທຳກໍ່ຈະບໍ່ມີຢູ່ເທິງແຜ່ນດິນໂລກອີກຕໍ່ໄປ ຫຼື ຈະບໍ່ມີການຣົບກວນຈາກກອງກຳລັງໃດໆຂອງສັດຕູອີກ ແລະ ມະນຸດຊາດກໍຈະໄດ້ເຂົ້າສູ່ໂລກໃໝ່, ມະນຸດຊາດຈະບໍ່ຖືກຊາຕານເຮັດໃຫ້ເສື່ອມຊາມອີກຕໍ່ໄປ, ແຕ່ກົງກັບຂ້າມ ພວກເຂົາຄືມະນຸດທີ່ໄດ້ຖືກຊ່ວຍໃຫ້ລອດພົ້ນ ຫຼັງຈາກທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ. ວັນທີ່ມະນຸດມີຄວາມສະຫງົບກໍຍັງຈະເປັນວັນທີ່ພຣະເຈົ້າມີຄວາມສະຫງົບເຊັ່ນກັນ. ພຣະເຈົ້າສູນເສຍຄວາມສະຫງົບກໍຍ້ອນວ່າມະນຸດບໍ່ສາມາດເຂົ້າສູ່ຄວາມສະຫງົບໄດ້, ບໍ່ແມ່ນເປັນຍ້ອນວ່າພຣະອົງບໍ່ສາມາດມີຄວາມສະຫງົບຕັ້ງແຕ່ຕົ້ນ. ການເຂົ້າສູ່ບ່ອນພັກເຊົາບໍ່ໄດ້ໝາຍຄວາມວ່າ ທຸກສິ່ງທຸກຢ່າງຈະຢຸດການເຄື່ອນໄຫວ ຫຼື ຢຸດພັດທະນາ ຫຼື ມັນໝາຍຄວາມວ່າ ພຣະເຈົ້າຈະຢຸດການເຮັດພາລະກິດ ຫຼື ມະນຸດຈະຢຸດການດຳເນີນຊີວິດ. ສັນຍານຂອງການເຂົ້າສູ່ບ່ອນພັກເຊົາແມ່ນເມື່ອຊາຕານໄດ້ຖືກທຳລາຍ, ເມື່ອຄົນຊົ່ວຮ້າຍເຫຼົ່ານັ້ນທີ່ເຂົ້າຮ່ວມກັບຊາຕານໃນການເຮັດຄວາມຊົ່ວຮ້າຍໄດ້ຖືກລົງໂທດ ແລະ ຖືກກວາດລ້າງ ແລະ ເມື່ອກຳລັງທັງໝົດ ທີ່ເປັນສັດຕູກັບພຣະເຈົ້າບໍ່ມີຢູ່ອີກຕໍ່ໄປ. ການທີ່ພຣະເຈົ້າເຂົ້າໄປສູ່ບ່ອນພັກເຊົາແມ່ນໝາຍຄວາມວ່າ ພຣະອົງຈະບໍ່ປະຕິບັດພາລະກິດແຫ່ງການລອດພົ້ນຂອງມະນຸດອີກຕໍ່ໄປ. ການທີ່ມະນຸດຊາດເຂົ້າສູ່ບ່ອນພັກເຊົາແມ່ນໝາຍຄວາມວ່າ ມະນຸດທຸກຄົນຈະຢູ່ພາຍໃຕ້ແສງສະຫວ່າງຂອງພຣະເຈົ້າ ແລະ ພາຍໃຕ້ການໃຫ້ພອນຂອງພຣະອົງ ໂດຍປາສະຈາກຄວາມເສື່ອມຊາມຂອງຊາຕານ ແລະ ຄວາມບໍ່

ຊອບທຳຈະບໍ່ເກີດຂຶ້ນອີກ. ພາຍໃຕ້ການເບິ່ງແຍງຂອງພຣະເຈົ້າ ມະນຸດຊາດຈະດຳລົງຊີວິດຕາມປົກກະຕິເທິງແຜ່ນດິນໂລກ. ເມື່ອພຣະເຈົ້າ ແລະ ມະນຸດຊາດເຂົ້າສູ່ບ່ອນພັກເຊົາຮ່ວມກັນກໍໝາຍຄວາມວ່າ ມະນຸດໄດ້ຮັບການຊ່ວຍໃຫ້ລອດພົ້ນ ແລະ ຊາຕານໄດ້ຖືກທຳລາຍ ແລະ ພາລະກິດຂອງພຣະເຈົ້າທີ່ປະຕິບັດຕໍ່ມະນຸດຊາດແມ່ນສຳເລັດລົງຢ່າງສົມບູນ. ພຣະເຈົ້າຈະບໍ່ສືບຕໍ່ເຮັດພາລະກິດກັບມະນຸດອີກ ແລະ ພວກເຂົາຈະບໍ່ຢູ່ພາຍໃຕ້ອຳນາດຂອງຊາຕານອີກຕໍ່ໄປ. ດ້ວຍເຫດນັ້ນ ພຣະເຈົ້າກໍຈະບໍ່ຫຍຸ້ງ ແລະ ມະນຸດກໍຈະບໍ່ວຸ້ນວາຍຕະຫຼອດເວລາອີກຕໍ່ໄປ; ພຣະເຈົ້າ ແລະ ມະນຸດຈະເຂົ້າສູ່ບ່ອນພັກເຊົາພ້ອມໆກັນ. ພຣະເຈົ້າຈະກັບຄືນໄປສູ່ສະຖານທີ່ເດີມຂອງພຣະອົງ ແລະ ແຕ່ລະຄົນກໍຈະກັບໄປສູ່ສະຖານທີ່ອັນຖືກຕ້ອງຂອງຕົນ. ນີ້ແມ່ນຈຸດໝາຍປາຍທາງທີ່ພຣະເຈົ້າ ແລະ ມະນຸດຈະອາໄສຢູ່ເມື່ອການຄຸ້ມຄອງທັງໝົດຂອງພຣະເຈົ້າສິ້ນສຸດລົງ. ພຣະເຈົ້າມີຈຸດໝາຍປາຍທາງຂອງພຣະອົງ ແລະ ມະນຸດກໍມີຈຸດໝາຍປາຍທາງຂອງມະນຸດ. ໃນຂະນະທີ່ພັກເຊົາ, ພຣະເຈົ້າຈະສືບຕໍ່ນຳພາມະນຸດຊາດທັງໝົດໃນການດຳລົງຊີວິດຂອງພວກເຂົາເທິງແຜ່ນດິນໂລກ ແລະ ໃນຂະນະທີ່ຢູ່ໃຕ້ແສງສະຫວ່າງຂອງພຣະອົງ, ພວກເຂົາຈະນະມັດສະການພຣະເຈົ້າທີ່ແທ້ຈິງອົງດຽວຢູ່ເທິງສະຫວັນ. ພຣະເຈົ້າຈະບໍ່ຢູ່ໃນທ່າມກາງມະນຸດຊາດອີກຕໍ່ໄປ ແລະ ມະນຸດກໍຈະບໍ່ສາມາດຢູ່ກັບພຣະເຈົ້າໃນຈຸດໝາຍປາຍທາງຂອງພຣະອົງໄດ້. ພຣະເຈົ້າ ແລະ ມະນຸດບໍ່ສາມາດອາໄສຢູ່ໃນໂລກດຽວກັນ; ໃນທາງກົງກັນຂ້າມ, ທັງສອງແມ່ນມີລັກສະນະການດຳລົງຊີວິດຂອງຕົນເອງທີ່ແຕກຕ່າງກັນ. ພຣະເຈົ້າເປັນຜູ້ທີ່ນຳພາມະນຸດຊາດທັງໝົດ ແລະ ມະນຸດທັງໝົດແມ່ນແກ້ວຜະລຶກແຫ່ງພາລະກິດການຄຸ້ມຄອງຂອງພຣະເຈົ້າ. ມະນຸດຊາດຄືຜູ້ທີ່ຖືກນຳພາ ແລະ ບໍ່ມີທາດແທ້ຄືກັນກັບພຣະເຈົ້າ. ການເຂົ້າສູ່ບ່ອນ "ພັກເຊົາ" ໝາຍເຖິງການກັບຄືນໄປສະຖານທີ່ດັ່ງເດີມຂອງຕົນ. ດັ່ງນັ້ນ, ເມື່ອພຣະເຈົ້າເຂົ້າສູ່ບ່ອນພັກເຊົາກໍໝາຍຄວາມວ່າ ພຣະອົງໄດ້ກັບຄືນສູ່ສະຖານທີ່ດັ່ງເດີມຂອງພຣະອົງ. ພຣະອົງຈະບໍ່ມີຊີວິດຢູ່ເທິງແຜ່ນດິນໂລກ ຫຼື ຢູ່ໃນທ່າມກາງມະນຸດເພື່ອແບ່ງປັນຄວາມສຸກ ແລະ ຄວາມທຸກທໍລະມານຂອງພວກເຂົາໄດ້ອີກຕໍ່ໄປ. ເມື່ອມະນຸດຊາດເຂົ້າສູ່ບ່ອນພັກເຊົາກໍໝາຍຄວາມວ່າ ພວກເຂົາໄດ້ກາຍເປັນສິ່ງຊົງສ້າງທີ່ແທ້ຈິງແລ້ວ; ພວກເຂົາຈະນະມັດສະການພຣະເຈົ້າຈາກແຜ່ນດິນໂລກ ແລະ ມີຊີວິດຂອງມະນຸດແບບປົກກະຕິ. ຜູ້ຄົນຈະບໍ່ເປັນຜູ້ຄົນທີ່ບໍ່ເຊື່ອຟັງພຣະເຈົ້າ ຫຼື ຕໍ່ຕ້ານພຣະອົງອີກຕໍ່ໄປ ແລະ ພວກເຂົາຈະກັບຄືນໄປຫາຊີວິດດັ່ງເດີມຂອງອາດາມ ແລະ ເອວາ. ສິ່ງເຫຼົ່ານີ້ຈະເປັນຊີວິດ ແລະ ຈຸດໝາຍປາຍທາງຂອງພຣະເຈົ້າ ແລະ ມະນຸດ ພາຍຫຼັງທີ່ພວກເຂົາໄດ້ເຂົ້າສູ່ບ່ອນພັກເຊົາ. ຄວາມພ່າຍແພ້ຂອງຊາຕານເປັນແນວໂນ້ມທີ່ຫຼີກເວັ້ນບໍ່ໄດ້ໃນສົງຄາມລະຫວ່າງພຣະເຈົ້າ ແລະ ຊາຕານ. ດ້ວຍເຫດນັ້ນ, ການເຂົ້າສູ່ບ່ອນພັກເຊົາຂອງພຣະເຈົ້າຫຼັງຈາກໄດ້ສຳເລັດພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ ແລະ ການຊ່ວຍມະນຸດໃຫ້ລອດພົ້ນຢ່າງສົມບູນ ແລະ ການເຂົ້າສູ່ບ່ອນພັກເຊົາກໍກາຍເປັນແນວໂນ້ມທີ່ຫຼີກເວັ້ນບໍ່ໄດ້ເຊັ່ນກັນ. ສະຖານທີ່ພັກເຊົາຂອງມະນຸດຊາດແມ່ນຢູ່ເທິງແຜ່ນດິນໂລກ ແລະ ສະຖານທີ່ພັກເຊົາຂອງພຣະເຈົ້າແມ່ນຢູ່ໃນສະຫວັນ. ໃນຂະນະທີ່ມະນຸດນະມັດສະການພຣະເຈົ້າໃນບ່ອນພັກເຊົາຂອງພຣະອົງ, ພວກເຂົາຈະມີຊີວິດຢູ່ເທິງແຜ່ນດິນໂລກ ແລະ ໃນຂະນະທີ່ພຣະເຈົ້ານຳພາມະນຸດທຸກຄົນໃນບ່ອນພັກ

ເຊົາຂອງພວກເຂົາ, ພຣະອົງຈະນຳພາພວກເຂົາຈາກສະຫວັນ ແລະ ບໍ່ແມ່ນຈາກແຜ່ນດິນໂລກ. ພຣະເຈົ້າຍັງຄົງຈະເປັນພຣະວິນຍານ ໃນຂະນະທີ່ມະນຸດຈະຍັງເປັນເນື້ອໜັງ. ພຣະເຈົ້າ ແລະ ມະນຸດແມ່ນພັກເຊົາໃນລັກສະນະທີ່ແຕກຕ່າງກັນ. ໃນຂະນະທີ່ພຣະເຈົ້າພັກເຊົາ, ພຣະອົງຈະສະເດັດມາ ແລະ ປາກົດຢູ່ທ່າມກາງມະນຸດ; ໃນຂະນະທີ່ມະນຸດພັກເຊົາ, ພວກເຂົາຈະຖືກນຳພາໂດຍພຣະເຈົ້າເພື່ອໄປສູ່ສະຫວັນ ແລະ ພ້ອມທັງເພື່ອມີຄວາມສຸກກັບຊີວິດໃນສະຫວັນ. ຫຼັງຈາກພຣະເຈົ້າ ແລະ ມະນຸດເຂົ້າສູ່ບ່ອນພັກເຊົາ ຊາຕານຈະບໍ່ມີຢູ່ອີກຕໍ່ໄປ; ເຊັ່ນດຽວກັນນັ້ນ ຄົນຊົ່ວທັງຫຼາຍກໍຈະບໍ່ມີຢູ່ອີກຕໍ່ໄປ. ກ່ອນທີ່ພຣະເຈົ້າ ແລະ ມະນຸດຈະເຂົ້າສູ່ບ່ອນພັກເຊົາ, ບຸກຄົນທີ່ຊົ່ວຮ້າຍເຫຼົ່ານັ້ນທີ່ເຄີຍຂົ່ມເຫັງພຣະເຈົ້າເທິງແຜ່ນດິນໂລກ, ພ້ອມທັງສັດຕູທີ່ບໍ່ເຊື່ອຟັງພຣະອົງໃນທີ່ນັ້ນກໍ່ຈະຖືກທຳລາຍ; ພວກເຂົາຈະຖືກທຳລາຍໂດຍໄພພິບັດທີ່ໃຫຍ່ຫຼວງໃນຍຸກສຸດທ້າຍ. ຫຼັງຈາກບຸກຄົນທີ່ຊົ່ວຮ້າຍເຫຼົ່ານັ້ນຖືກທຳລາຍໝົດແລ້ວ, ແຜ່ນດິນໂລກກໍຈະບໍ່ພົບກັບການຂົ່ມຂູ່ຂອງຊາຕານອີກ. ມີແຕ່ເມື່ອນັ້ນ ມະນຸດຊາດຈຶ່ງຈະໄດ້ຮັບຄວາມລອດພົ້ນຢ່າງສົມບູນ ແລະ ພາລະກິດຂອງພຣະເຈົ້າຈຶ່ງຈະສິ້ນສຸດລົງຢ່າງສົມບູນ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຈຳເປັນຕ້ອງມີສຳລັບພຣະເຈົ້າ ແລະ ມະນຸດໃນການເຂົ້າສູ່ບ່ອນພັກເຊົາ.

ການໃກ້ເຖິງຈຸດສິ້ນສຸດຂອງທຸກສັບພະສິ່ງຊີ້ໃຫ້ເຫັນເຖິງການສິ້ນສຸດພາລະກິດຂອງພຣະເຈົ້າ ແລະ ພ້ອມທັງຊີ້ໃຫ້ເຫັນເຖິງການສິ້ນສຸດຂອງການພັດທະນາຂອງມະນຸດ. ນີ້ໝາຍຄວາມວ່າມະນຸດທີ່ຖືກເຮັດໃຫ້ເສື່ອມຊາມໂດຍຊາຕານຈະເຖິງຂັ້ນຕອນສຸດທ້າຍຂອງການພັດທະນາຂອງພວກເຂົາ ແລະ ເຊື້ອສາຍຂອງອາດາມ ແລະ ເອວາກໍຈະໄດ້ສິ້ນສຸດການແຜ່ພັນຂອງພວກເຂົາ. ມັນຍັງໝາຍຄວາມວ່າມັນເປັນໄປບໍ່ໄດ້ສຳລັບມະນຸດດັ່ງກ່າວ ທີ່ເສື່ອມຊາມຍ້ອນຊາຕານຈະສືບຕໍ່ພັດທະນາ. ອາດາມ ແລະ ເອວາ ໃນຕອນເລີ່ມຕົ້ນບໍ່ໄດ້ຖືກໄດ້ເຮັດໃຫ້ເສື່ອມຊາມ ແຕ່ອາດາມ ແລະ ເອວາ ທີ່ຖືກຂັບໄລ່ອອກຈາກສວນເອເດນໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມ. ເມື່ອພຣະເຈົ້າ ແລະ ມະນຸດເຂົ້າສູ່ບ່ອນພັກເຊົາຮ່ວມກັນ, ອາດາມ ແລະ ເອວາທີ່ຖືກຂັບໄລ່ອອກຈາກສວນເອເດນ ແລະ ເຊື້ອສາຍຂອງພວກເຂົາກໍຈະໄປສູ່ຈຸດຈົບໃນທີ່ສຸດ. ມະນຸດຊາດໃນອະນາຄົດຈະຍັງມີລູກຫຼານຂອງອາດາມ ແລະ ເອວາ ແຕ່ພວກເຂົາຈະບໍ່ເປັນຄົນທີ່ຢູ່ພາຍໃຕ້ອິດທິພົນຂອງຊາຕານ. ກົງກັນຂ້າມ, ພວກເຂົາຈະເປັນຄົນທີ່ໄດ້ຮັບການຊ່ວຍໃຫ້ລອດພົ້ນ ແລະ ຖືກຊຳລະລ້າງໃຫ້ບໍລິສຸດ. ພວກເຂົາເຫຼົ່ານີ້ຈະເປັນມະນຸດທີ່ຖືກພິພາກສາ ແລະ ຖືກຂ້ຽນຕີແລ້ວ ແລະ ເປັນຄົນທີ່ບໍລິສຸດ. ຜູ້ຄົນເຫຼົ່ານີ້ຈະບໍ່ຄືກັນກັບເຊື້ອຊາດຂອງມະນຸດໃນຕອນທຳອິດ; ເກືອບສາມາດເວົ້າໄດ້ວ່າພວກເຂົາເປັນບຸກຄົນທີ່ແຕກຕ່າງຢ່າງສິ້ນເຊີງຈາກອາດາມ ແລະ ເອວາໃນເບື້ອງຕົ້ນ. ຜູ້ຄົນເຫຼົ່ານີ້ຈະໄດ້ຮັບການຄັດເລືອກຈາກຈຳນວນຄົນທັງໝົດທີ່ເສື່ອມຊາມຍ້ອນຊາຕານ ແລະ ພວກເຂົາຈະເປັນຄົນທີ່ຢືນຢູ່ຢ່າງໝັ້ນຄົງໃນໄລຍະການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າ; ພວກເຂົາຈະເປັນກຸ່ມທີ່ລອດເຫຼືອຈາກກຸ່ມຄົນທີ່ເສື່ອມຊາມ. ມີພຽງແຕ່ຜູ້ຄົນເຫຼົ່ານີ້ເທົ່ານັ້ນທີ່ຈະສາມາດເຂົ້າສູ່ບ່ອນພັກເຊົາຮ່ວມກັບພຣະເຈົ້າໄດ້. ຜູ້ທີ່ສາມາດຍຶດໝັ້ນໃນໄລຍະການປະຕິບັດພາລະກິດພິພາກສາ ແລະ ການຂ້ຽນຕີຂອງພຣະອົງໃນລະຫວ່າງຍຸກສຸດທ້າຍ ເຊິ່ງນັ້ນກໍຄື ໃນໄລຍະພາລະກິດຂັ້ນຕອນສຸດທ້າຍຂອງການຊຳລະລ້າງບາບ ຈະເປັນຜູ້ໄດ້ເຂົ້າສູ່ບ່ອນພັກເຊົາກັບພຣະເຈົ້າ;

ສະນັ້ນ, ທຸກຄົນທີ່ເຂົ້າສູ່ບ່ອນພັກເຊົາລ້ວນແລ້ວແຕ່ເປັນຄົນທີ່ຫຼຸດພົ້ນຈາກອິດທິພົນຂອງຊາຕານ ແລະ ໄດ້ຖືກຮັບເອົາໂດຍພຣະເຈົ້າ ຫຼັງຈາກທີ່ໄດ້ຜ່ານພາລະກິດຊໍາລະລ້າງໃຫ້ບໍລິສຸດບາບຂອງພຣະອົງ. ໃນທີ່ສຸດ ມະນຸດເຫຼົ່ານີ້ທີ່ຖືກຮັບເອົາໂດຍພຣະເຈົ້າຈະໄດ້ເຂົ້າສູ່ບ່ອນພັກເຊົາຢ່າງຖາວອນ. ຈຸດປະສົງສໍາຄັນຂອງພາລະກິດຂອງການຂ້ຽນຕີ ແລະ ການພິພາກສາຂອງພຣະເຈົ້າແມ່ນເພື່ອຊໍາລະລ້າງບາບໃຫ້ກັບມະນຸດຊາດ ເພື່ອການພັກເຊົາຄັ້ງສຸດທ້າຍ; ຖ້າບໍ່ມີການຊໍາລະລ້າງບາບ ມະນຸດຊາດກໍ່ຈະບໍ່ສາມາດຖືກຈັດຕາມປະເພດຂອງພວກເຂົາໄດ້ ຫຼື ເຂົ້າສູ່ບ່ອນພັກເຊົາໄດ້. ພາລະກິດນີ້ຄືເສັ້ນທາງດຽວຂອງມະນຸດເທົ່ານັ້ນທີ່ຈະເຂົ້າສູ່ບ່ອນພັກເຊົາໄດ້. ມີພຽງພາລະກິດແຫ່ງການຊໍາລະລ້າງບາບຂອງພຣະເຈົ້າເທົ່ານັ້ນທີ່ຈະຊໍາລະລ້າງມະນຸດອອກຈາກຄວາມບໍ່ຊອບທໍາຂອງພວກເຂົາໄດ້ ແລະ ມີພຽງພາລະກິດຂອງການຂ້ຽນຕີ ແລະ ການພິພາກສາຂອງພຣະອົງເທົ່ານັ້ນທີ່ຈະນໍາເອົາແສງສະຫວ່າງມາສູ່ອົງປະກອບທີ່ບໍ່ເຊື່ອຟັງຂອງມະນຸດຊາດ ເພື່ອແຍກຜູ້ທີ່ຈະສາມາດໄດ້ຮັບການຊ່ວຍໃຫ້ລອດພົ້ນອອກຈາກຜູ້ທີ່ຈະບໍ່ສາມາດໄດ້ຮັບການຊ່ວຍໃຫ້ລອດພົ້ນ ແລະ ແຍກຜູ້ທີ່ຈະຍັງຢູ່ອອກຈາກຜູ້ທີ່ຈະບໍ່ຍັງຢູ່. ເມື່ອພາລະກິດນີ້ຂອງພຣະອົງສິ້ນສຸດລົງ, ຜູ້ທີ່ອະນຸຍາດໃຫ້ມີຊີວິດຢູ່ຈະຖືກຊໍາລະລ້າງ ແລະ ເຂົ້າສູ່ສະພາບທີ່ສູງຂຶ້ນຂອງມະນຸດ ເຊິ່ງພວກເຂົາຈະມີຄວາມສຸກກັບຊີວິດມະນຸດອັນງົດງາມອີກຄັ້ງໃໝ່ເທິງແຜ່ນດິນໂລກ; ເວົ້າອີກຢ່າງໜຶ່ງກໍຄື ພວກເຂົາຈະເລີ່ມວັນແຫ່ງການພັກເຊົາຂອງມະນຸດ ແລະ ໃຊ້ຊີວິດຢູ່ຮ່ວມກັບພຣະເຈົ້າ. ຫຼັງຈາກຜູ້ທີ່ບໍ່ໄດ້ຮັບອະນຸຍາດໃຫ້ມີຊີວິດຢູ່ໄດ້ຖືກຂ້ຽນຕີ ແລະ ຖືກພິພາກສາ, ທາດແທ້ຂອງພວກເຂົາກໍຈະຖືກເປີດເຜີຍທັງໝົດ ເຊິ່ງຫຼັງຈາກນັ້ນ ພວກເຂົາທຸກຄົນກໍຈະຖືກທໍາລາຍ ແລະ ພວກເຂົາຈະບໍ່ໄດ້ຮັບອະນຸຍາດໃຫ້ມີຊີວິດຢູ່ໃນແຜ່ນດິນໂລກນີ້ອີກຕໍ່ໄປຄືດັ່ງຊາຕານ. ມະນຸດໃນອະນາຄົດຈະບໍ່ມີຜູ້ຄົນປະເພດນີ້ອີກ; ຜູ້ຄົນດັ່ງກ່າວບໍ່ເໝາະທີ່ຈະເຂົ້າສູ່ດິນແດນແຫ່ງຄວາມສະຫງົບສຸດທ້າຍ ຫຼື ພວກເຂົາບໍ່ເໝາະທີ່ຈະເຂົ້າຮ່ວມວັນແຫ່ງຄວາມສະຫງົບທີ່ພຣະເຈົ້າ ແລະ ມະນຸດຈະແບ່ງປັນກັນ ເນື່ອງຈາກວ່າ ພວກເຂົາຄືເປົ້າໝາຍໃນການລົງໂທດ ແລະ ເປັນຄົນຊົ່ວຊ້າ ແລະ ຄົນໄຮ້ສິນທໍາ. ພວກເຂົາໄດ້ຮັບການໄຖ່ບາບຄັ້ງໜຶ່ງ ແລະ ພວກເຂົາກໍຖືກພິພາກສາ ແລະ ຂ້ຽນຕີ; ພວກເຂົາຍັງໄດ້ໃຫ້ການຮັບໃຊ້ຄັ້ງໜຶ່ງແກ່ພຣະເຈົ້າ. ຢ່າງໃດກໍຕາມ, ເມື່ອວັນສຸດທ້າຍມາເຖິງ, ພວກເຂົາຈະຖືກກໍາຈັດ ແລະ ຖືກທໍາລາຍ ຍ້ອນຄວາມຊົ່ວຮ້າຍຂອງພວກເຂົາເອງ ແລະ ຍ້ອນການບໍ່ເຊື່ອຟັງ ແລະ ຄວາມບໍ່ສາມາດທີ່ຈະໄດ້ຮັບການໄຖ່ບາບຂອງພວກເຂົາ; ພວກເຂົາຈະບໍ່ມີຢູ່ໃນໂລກແຫ່ງອະນາຄົດ ແລະ ພວກເຂົາຈະບໍ່ມີຊີວິດໃນທ່າມກາງເຊື້ອຊາດຂອງມະນຸດໃນອະນາຄົດ. ບໍ່ວ່າພວກເຂົາຈະເປັນວິນຍານຂອງຄົນຕາຍ ຫຼື ເປັນຄົນທີ່ຍັງໃຊ້ຊີວິດໃນເນື້ອໜັງ, ຄົນຊົ່ວຮ້າຍທຸກຄົນ ແລະ ທຸກຄົນທີ່ບໍ່ໄດ້ຮັບການຊ່ວຍໃຫ້ລອດພົ້ນ ຈະຖືກທໍາລາຍຫຼັງຈາກທີ່ຄົນທີ່ບໍລິສຸດໃນທ່າມກາງມະນຸດຊາດໄດ້ເຂົ້າສູ່ການພັກເຊົາ. ສໍາລັບວິນຍານທີ່ຊົ່ວຮ້າຍ ແລະ ຄົນຊົ່ວຮ້າຍເຫຼົ່ານີ້ ຫຼື ວິນຍານຂອງຄົນທີ່ຊອບທໍາ ແລະ ຄົນທີ່ເຮັດໃນສິ່ງທີ່ຊອບທໍາ, ບໍ່ວ່າຈະຢູ່ໃນຍຸກໃດກໍຕາມ ທຸກຄົນທີ່ກະທໍາຊົ່ວຈະຖືກທໍາລາຍໃນທີ່ສຸດ ແລະ ທຸກຄົນທີ່ຊອບທໍາຈະຢູ່ລອດ. ການທີ່ບຸກຄົນ ຫຼື ວິນຍານຈະໄດ້ຮັບຄວາມລອດພົ້ນແມ່ນບໍ່ໄດ້ຖືກຕັດສິນໂດຍອີງໃສ່ພາລະກິດຂອງຍຸກສຸດທ້າຍທັງໝົດ; ກົງກັນຂ້າມ, ມັນຖືກກໍານົດໂດຍອີງໃສ່ວ່າ

ພວກເຂົາໄດ້ຕໍ່ຕ້ານ ຫຼື ບໍ່ເຊື່ອຟັງຕໍ່ພຣະເຈົ້າ ຫຼື ບໍ່. ຖ້າຜູ້ຄົນໃນຍຸກກ່ອນໄດ້ເຮັດຄວາມຊົ່ວ ແລະ ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ກໍຈະເປັນເປົ້າໝາຍຂອງການລົງໂທດຢ່າງບໍ່ຕ້ອງສົງໄສ ແລະ ຄົນໃນຍຸກນີ້ທີ່ເຮັດຄວາມຊົ່ວ ແລະ ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ກໍຈະເປັນເປົ້າໝາຍຂອງການລົງໂທດຢ່າງແນ່ນອນເຊັ່ນກັນ. ມະນຸດຖືກແຍກອອກ ໂດຍອີງໃສ່ພື້ນຖານຄວາມດີ ແລະ ຄວາມຊົ່ວ, ບໍ່ແມ່ນໃນຍຸກທີ່ພວກເຂົາອາໄສຢູ່. ເມື່ອຖືກແບ່ງແຍກ, ພວກເຂົາຈະບໍ່ຖືກລົງໂທດ ຫຼື ໄດ້ຮັບລາງວັນທັນທີ; ແຕ່ກົງກັນຂ້າມ ພຣະເຈົ້າຈະພຽງແຕ່ປະຕິບັດພາລະກິດຂອງພຣະອົງໃນການລົງໂທດຄວາມຊົ່ວ ແລະ ໃຫ້ລາງວັນແກ່ຄວາມດີ ຫຼັງຈາກທີ່ພຣະອົງໄດ້ດຳເນີນພາລະກິດແຫ່ງການເອົາຊະນະຂອງພຣະອົງໃນຍຸກສຸດທ້າຍ. ຄວາມຈິງແລ້ວ, ພຣະອົງໄດ້ແບ່ງແຍກມະນຸດອອກເປັນຄົນດີ ແລະ ຄົນຊົ່ວນັບຕັ້ງແຕ່ພຣະອົງເລີ່ມດຳເນີນພາລະກິດທີ່ພຣະອົງຊ່ວຍມະນຸດຊາດໃຫ້ລອດພົ້ນ. ມັນເປັນພຽງແຕ່ວ່າພຣະອົງຈະມອບລາງວັນໃຫ້ແກ່ຄົນຊອບທຳ ແລະ ລົງໂທດຄົນຊົ່ວຫຼັງຈາກພາລະກິດຂອງພຣະອົງສິ້ນສຸດລົງເທົ່ານັ້ນ; ມັນບໍ່ແມ່ນວ່າ ພຣະອົງຈະແຍກພວກເຂົາອອກເປັນປະເພດໃຜລາວຫຼັງຈາກສຳເລັດພາລະກິດຂອງພຣະອົງ ແລ້ວຫຼັງຈາກນັ້ນກໍເລີ່ມຕົ້ນປະຕິບັດພາລະກິດຂອງພຣະອົງໃນການລົງໂທດຄົນຊົ່ວ ແລະ ມອບລາງວັນໃຫ້ຄົນດີທັນທີ. ກົງກັນຂ້າມ, ໜ້າວຽກນີ້ຈະຖືກປະຕິບັດເມື່ອພາລະກິດຂອງພຣະອົງສຳເລັດລົງຢ່າງສົມບູນເທົ່ານັ້ນ. ຈຸດປະສົງທັງໝົດທີ່ຢູ່ເບື້ອງຫຼັງພາລະກິດແທ້ຈິງຂອງພຣະເຈົ້າໃນການລົງໂທດຄົນຊົ່ວ ແລະ ການມອບລາງວັນໃຫ້ແກ່ຄົນດີນັ້ນ ແມ່ນເພື່ອຊຳລະລ້າງມະນຸດທັງປວງໃຫ້ບໍລິສຸດ ເພື່ອວ່າພຣະອົງຈະສາມາດນຳເອົາມວນມະນຸດຜູ້ທີ່ບໍລິສຸດເຂົ້າສູ່ບ່ອນພັກເຊົາຢ່າງນິລັນດອນ. ຂັ້ນຕອນພາລະກິດນີ້ຂອງພຣະອົງແມ່ນສຳຄັນທີ່ສຸດ; ມັນແມ່ນຂັ້ນຕອນສຸດທ້າຍຂອງພາລະກິດຄຸ້ມຄອງທັງໝົດຂອງພຣະອົງ. ຖ້າພຣະເຈົ້າບໍ່ໄດ້ທຳລາຍຄົນຊົ່ວ ແຕ່ປ່ອຍໃຫ້ພວກເຂົາຍັງຢູ່, ມະນຸດທຸກຄົນກໍຈະບໍ່ສາມາດເຂົ້າສູ່ບ່ອນພັກເຊົາໄດ້ ແລະ ພຣະເຈົ້າກໍຈະບໍ່ສາມາດນຳເອົາມວນມະນຸດເຂົ້າສູ່ໂລກທີ່ດີກວ່ານີ້ໄດ້. ແລ້ວພາລະກິດດັ່ງກ່າວກໍຈະບໍ່ສຳເລັດຜົນ. ເມື່ອພຣະອົງສຳເລັດພາລະກິດຂອງພຣະອົງ, ມວນມະນຸດທັງປວງກໍຈະເປັນຄົນບໍລິສຸດທັງໝົດ; ດ້ວຍວິທີນີ້ເທົ່ານັ້ນ ພຣະເຈົ້າຈຶ່ງຈະສາມາດເຂົ້າສູ່ບ່ອນພັກເຊົາໄດ້ຢ່າງສະຫງົບ.

ຜູ້ຄົນໃນທຸກມື້ນີ້ຍັງບໍ່ສາມາດປ່ອຍວາງສິ່ງຕ່າງໆທາງຝ່າຍເນື້ອໜັງ; ພວກເຂົາບໍ່ສາມາດປະຖິ້ມຄວາມສຸກຂອງເນື້ອໜັງ, ທາງໂລກ, ເງິນ ຫຼື ອຸປະນິໄສອັນເສື່ອມຊາມຂອງພວກເຂົາ. ຜູ້ຄົນສ່ວນຫຼາຍແມ່ນສະແຫວງຫາພໍເປັນພິທີ. ທີ່ຈິງແລ້ວ, ຜູ້ຄົນເຫຼົ່ານີ້ບໍ່ມີພຣະເຈົ້າຢູ່ໃນໃຈຂອງພວກເຂົາເລີຍ; ຍິ່ງໄປກວ່ານັ້ນ, ພວກເຂົາບໍ່ຢຳເກງພຣະເຈົ້າ. ພວກເຂົາບໍ່ມີພຣະເຈົ້າຢູ່ໃນໃຈຂອງພວກເຂົາ ແລະ ດັ່ງນັ້ນພວກເຂົາບໍ່ສາມາດເຂົ້າໃຈທຸກຢ່າງທີ່ພຣະເຈົ້າກະທຳ ແລະ ແຮງໄກທີ່ພວກເຂົາຈະສາມາດເຊື່ອໃນພຣະທຳທີ່ພຣະອົງກ່າວ. ຜູ້ຄົນດັ່ງກ່າວແມ່ນຍຶດຕິດກັບເນື້ອໜັງຫຼາຍເກີນໄປ; ພວກເຂົາເສື່ອມຊາມຢ່າງໜັກ ແລະ ຂາດຄວາມຈິງທຸກປະການ. ຍິ່ງໄປກວ່ານັ້ນ ພວກເຂົາບໍ່ເຊື່ອວ່າພຣະເຈົ້າຈະສາມາດກາຍເປັນເນື້ອໜັງ. ໃຜກໍຕາມທີ່ບໍ່ເຊື່ອໃນການບັງເກີດເປັນເນື້ອໜັງຂອງພຣະເຈົ້າ ເຊິ່ງນັ້ນກໍຄື ໃຜກໍຕາມທີ່ບໍ່ເຊື່ອໃນພຣະເຈົ້າທີ່ເບິ່ງເຫັນໄດ້ ຫຼື ພາລະກິດ ແລະ ພຣະທຳຂອງພຣະອົງ, ແຕ່ກົງກັນຂ້າມ

ບູຊາພຣະເຈົ້າທີ່ເບິ່ງບໍ່ເຫັນໃນສະຫວັນ ແມ່ນບຸກຄົນທີ່ບໍ່ມີພຣະເຈົ້າຢູ່ໃນຫົວໃຈຂອງພວກເຂົາ. ຄົນດັ່ງກ່າວເປັນຄົນກະບົດ ແລະ ຕໍ່ຕ້ານພຣະເຈົ້າ. ພວກເຂົາບໍ່ມີຄວາມເປັນມະນຸດ ແລະ ບໍ່ມີເຫດຜົນ, ແຮງໄກທີ່ຈະມີຄວາມຈິງ. ຍິ່ງໄປກວ່ານັ້ນ ສຳລັບຜູ້ຄົນເຫຼົ່ານີ້, ພຣະເຈົ້າທີ່ເບິ່ງເຫັນໄດ້ ແລະ ຈັບຕ້ອງໄດ້ແມ່ນຍິ່ງບໍ່ສາມາດເຊື່ອ, ແຕ່ພວກເຂົາຄິດວ່າພຣະເຈົ້າທີ່ເບິ່ງບໍ່ເຫັນ ແລະ ຈັບຕ້ອງບໍ່ໄດ້ແມ່ນໜ້າເຊື່ອຖືທີ່ສຸດ ແລະ ໜ້າຍິນດີທີ່ສຸດ. ສິ່ງທີ່ພວກເຂົາສະແຫວງຫາບໍ່ແມ່ນຄວາມຈິງແທ້ ຫຼື ມັນແມ່ນແກ່ນແທ້ຂອງຊີວິດ; ແຮງໄກທີ່ຈະແມ່ນຄວາມປະສົງຂອງພຣະເຈົ້າ. ກົງກັນຂ້າມ ພວກເຂົາສະແຫວງຫາຄວາມຕື່ນເຕັ້ນ. ສິ່ງໃດກໍຕາມທີ່ສາມາດເຮັດໃຫ້ພວກເຂົາບັນລຸຄວາມປາດຖະໜາຂອງພວກເຂົາແນ່ນອນ ຄືສິ່ງທີ່ພວກເຂົາເຊື່ອ ແລະ ສິ່ງທີ່ພວກເຂົາສະແຫວງຫາ. ພວກເຂົາພຽງແຕ່ເຊື່ອໃນພຣະເຈົ້າເພື່ອຕອບສະໜອງຄວາມປາດຖະໜາຂອງພວກເຂົາເອງ, ບໍ່ແມ່ນເພື່ອຊອກຫາຄວາມຈິງ. ຜູ້ຄົນດັ່ງກ່າວບໍ່ແມ່ນຄົນຊົ່ວຮ້າຍບໍ? ພວກເຂົາມີຄວາມໝັ້ນໃຈໃນຕົວເອງສູງຫຼາຍ ແລະ ພວກເຂົາບໍ່ເຊື່ອວ່າພຣະເຈົ້າຢູ່ໃນສະຫວັນຈະທຳລາຍ “ຄົນດີ” ຄືພວກເຂົາໄດ້. ກົງກັນຂ້າມ, ພວກເຂົາເຊື່ອວ່າພຣະເຈົ້າຈະອະນຸຍາດໃຫ້ພວກເຂົາມີຊີວິດຢູ່ ແລະ ຍິ່ງໄປກວ່ານັ້ນຈະໃຫ້ລາງວັນແກ່ພວກເຂົາຢ່າງສວຍງາມຍ້ອນພວກເຂົາໄດ້ເຮັດຫຼາຍສິ່ງຫຼາຍຢ່າງໃຫ້ແກ່ພຣະເຈົ້າ ແລະ ໄດ້ສະແດງເຖິງຄວາມ “ພັກດີ” ອັນໃຫຍ່ຫຼວງຕໍ່ພຣະອົງ. ຖ້າພວກເຂົາຕ້ອງສະແຫວງຫາພຣະເຈົ້າທີ່ເບິ່ງເຫັນໄດ້, ເມື່ອຄວາມປາດຖະໜາຂອງພວກເຂົາບໍ່ໄດ້ດັ່ງຄາດຫວັງ ພວກເຂົາກໍຈະໂຈມຕີຄືນພຣະເຈົ້າທັນທີ ຫຼື ເກີດມີຄວາມໂກດແຄ້ນ. ພວກເຂົາສະແດງຕົນເອງເປັນຄົນຊົ່ວຮ້າຍທີ່ໜ້າລັງກຽດທີ່ຊອກຫາເຮັດຕາມຄວາມປາດຖະໜາຂອງພວກເຂົາເອງເທົ່ານັ້ນ; ພວກເຂົາບໍ່ແມ່ນຄົນທີ່ມີຄວາມຊື່ສັດໃນການສະແຫວງຫາຄວາມຈິງ. ຜູ້ຄົນດັ່ງກ່າວແມ່ນຜູ້ທີ່ເອີ້ນວ່າຄົນຊົ່ວທີ່ຕິດຕາມພຣະຄຣິດ. ຜູ້ຄົນເຫຼົ່ານີ້ທີ່ບໍ່ໄດ້ຊອກຫາຄວາມຈິງແມ່ນບໍ່ສາມາດມີທາງເຊື່ອຄວາມຈິງໄດ້ ແລະ ທຸກຄົນຍິ່ງບໍ່ສາມາດເຂົ້າໃຈຜົນໄດ້ຮັບໃນອະນາຄົດຂອງມະນຸດຊາດໄດ້ ເພາະວ່າພວກເຂົາບໍ່ເຊື່ອໃນພາລະກິດ ຫຼື ພຣະທຳໃດໆຂອງພຣະເຈົ້າທີ່ເບິ່ງເຫັນໄດ້ ແລະ ນີ້ພ້ອມທັງບໍ່ສາມາດເຊື່ອໃນຈຸດໝາຍປາຍທາງໃນອະນາຄົດຂອງມະນຸດຊາດ. ເພາະສະນັ້ນ, ເຖິງແມ່ນວ່າພວກເຂົາຈະຕິດຕາມພຣະເຈົ້າທີ່ເບິ່ງເຫັນໄດ້, ພວກເຂົາກໍຍັງສ້າງຄວາມຊົ່ວ ແລະ ບໍ່ໄດ້ສະແຫວງຫາຄວາມຈິງເລີຍ ຫຼື ພວກເຂົາປະຕິບັດຄວາມຈິງທີ່ເຮົາຕ້ອງການ. ຜູ້ຄົນເຫຼົ່ານັ້ນທີ່ບໍ່ເຊື່ອວ່າພວກເຂົາຈະຖືກທຳລາຍແມ່ນແທ້ຈິງແລ້ວກໍຄືບຸກຄົນທີ່ຈະຖືກທຳລາຍ. ພວກເຂົາທັງໝົດເຊື່ອວ່າພວກເຂົາເປັນຄົນທີ່ສະຫຼາດຫຼາຍ ແລະ ພວກເຂົາເຊື່ອວ່າພວກເຂົາເອງເປັນຜູ້ທີ່ປະຕິບັດຄວາມຈິງ. ພວກເຂົາຖືວ່າການກະທຳຊົ່ວຮ້າຍຂອງພວກເຂົາແມ່ນຄວາມຈິງ ແລະ ສະນັ້ນ ຈຶ່ງໄດ້ຖະໜອມມັນ. ຄົນຊົ່ວດັ່ງກ່າວມີຄວາມໝັ້ນໃຈໃນຕົວເອງຫຼາຍ; ພວກເຂົາຖືຄວາມຈິງເປັນຫຼັກຄຳສອນ ແລະ ຖືການກະທຳຊົ່ວຂອງພວກເຂົາເປັນຄວາມຈິງ, ແຕ່ໃນທີ່ສຸດ ພວກເຂົາກໍຈະໄດ້ເກັບກ່ຽວສິ່ງທີ່ພວກເຂົາຫວ່ານເທົ່ານັ້ນ. ຍິ່ງຜູ້ຄົນມີຄວາມໝັ້ນໃຈໃນຕົວເອງສູງເທົ່າໃດ ແລະ ພວກເຂົາຍິ່ງອວດດີຫຼາຍເທົ່າໃດ, ພວກເຂົາກໍຍິ່ງບໍ່ສາມາດໄດ້ຮັບຄວາມຈິງຫຼາຍເທົ່ານັ້ນ; ຍິ່ງຜູ້ຄົນເຊື່ອໃນພຣະເຈົ້າເທິງສະຫວັນຫຼາຍເທົ່າໃດ, ພວກເຂົາກໍຍິ່ງຕໍ່ຕ້ານພຣະເຈົ້າຫຼາຍເທົ່ານັ້ນ. ຜູ້ຄົນເຫຼົ່ານີ້ແມ່ນຜູ້ຄົນທີ່ຈະຖືກລົງໂທດ. ກ່ອນ

ມະນຸດເຂົ້າສູ່ບ່ອນພັກເຊົາ, ການທີ່ຄົນແຕ່ລະປະເພດຖືກລົງໂທດ ຫຼື ໄດ້ຮັບລາງວັນ ແມ່ນຈະຖືກກຳນົດໂດຍອີງຕາມວ່າ ພວກເຂົາສະແຫວງຫາຄວາມຈິງ, ວ່າພວກເຂົາຮູ້ຈັກພຣະເຈົ້າ ແລະ ວ່າພວກເຂົາຈະສາມາດເຊື່ອຟັງພຣະເຈົ້າທີ່ເບິ່ງເຫັນໄດ້ ຫຼື ບໍ່. ຜູ້ທີ່ໄດ້ໃຫ້ການຮັບໃຊ້ແກ່ພຣະເຈົ້າທີ່ເບິ່ງເຫັນໄດ້ ແຕ່ຍັງບໍ່ຮູ້ ຫຼື ບໍ່ເຊື່ອຟັງພຣະອົງແມ່ນບໍ່ມີຄວາມຈິງ. ຜູ້ຄົນດັ່ງກ່າວແມ່ນຄົນຊົ່ວຮ້າຍ ແລະ ຄົນຊົ່ວຮ້າຍກໍຄືເປົ້າໝາຍຂອງການລົງໂທດຢ່າງບໍ່ຕ້ອງສົງໄສ; ຍິ່ງໄປກວ່ານັ້ນ, ພວກເຂົາຈະຖືກລົງໂທດອີງຕາມການກະທຳຊົ່ວຂອງພວກເຂົາ. ພຣະເຈົ້າແມ່ນເພື່ອໃຫ້ຜູ້ຄົນເຊື່ອ ແລະ ພຣະອົງສົມຄວນໄດ້ຮັບການເຊື່ອຟັງຂອງມະນຸດເຊັ່ນກັນ. ຜູ້ທີ່ພຽງແຕ່ເຊື່ອໃນພຣະເຈົ້າເລື່ອນລອຍ ແລະ ເບິ່ງບໍ່ເຫັນແມ່ນຜູ້ທີ່ບໍ່ເຊື່ອໃນພຣະເຈົ້າ ແລະ ພວກເຂົາບໍ່ສາມາດເຊື່ອຟັງພຣະເຈົ້າ. ຖ້າຄົນເຫຼົ່ານີ້ຍັງບໍ່ສາມາດຈັດການໃນການເຊື່ອພຣະເຈົ້າທີ່ເບິ່ງເຫັນໄດ້ ໃນເວລາທີ່ພາລະກິດແຫ່ງການເອົາຊະນະຂອງພຣະເຈົ້າສິ້ນສຸດລົງ ແລະ ຍັງສືບຕໍ່ບໍ່ເຊື່ອຟັງ ແລະ ຕໍ່ຕ້ານພຣະເຈົ້າທີ່ເຫັນໄດ້ໃນເນື້ອໜັງ, ແລ້ວ "ຜູ້ເຊື່ອເລື່ອນລອຍ" ເຫຼົ່ານີ້ຈະກາຍເປັນເປົ້າໝາຍຂອງການທຳລາຍຢ່າງບໍ່ຕ້ອງສົງໄສ. ມັນເປັນຄືກັບບາງຄົນທ່າມກາງພວກເຈົ້າ ເຊິ່ງໃຜກໍຕາມທີ່ຮັບຮູ້ພຣະເຈົ້າທີ່ບັງເກີດເປັນມະນຸດດ້ວຍຄຳເວົ້າ ແຕ່ບໍ່ສາມາດປະຕິບັດຄວາມຈິງໃນການເຊື່ອຟັງພຣະເຈົ້າທີ່ບັງເກີດເປັນມະນຸດ ໃນທີ່ສຸດ ກໍຈະຖືກໂຍນອອກ ແລະ ການທຳລາຍ. ຍິ່ງໄປກວ່ານັ້ນ ໃຜກໍຕາມທີ່ຮັບຮູ້ພຣະເຈົ້າທີ່ເບິ່ງເຫັນໄດ້ດ້ວຍຄຳເວົ້າ, ກິນ ແລະ ດື່ມຄວາມຈິງທີ່ສະແດງອອກໂດຍພຣະອົງໃນຂະນະທີ່ຍັງສະແຫວງພຣະເຈົ້າທີ່ເລື່ອນລອຍ ແລະ ເບິ່ງບໍ່ເຫັນກໍຍິ່ງຈະເປັນເປົ້າໃຫ້ຖືກທຳລາຍຢ່າງແນ່ນອນ. ບໍ່ມີຜູ້ໃດໃນຜູ້ຄົນເຫຼົ່ານີ້ ທີ່ຈະສາມາດຄົງຢູ່ຈົນຮອດເວລາແຫ່ງການພັກເຊົາທີ່ຈະມາເຖິງຫຼັງຈາກທີ່ພາລະກິດຂອງພຣະເຈົ້າໄດ້ສິ້ນສຸດລົງ ຫຼື ຈະບໍ່ມີບຸກຄົນໃດ ທີ່ຄືກັນກັບຜູ້ຄົນດັ່ງກ່າວຍັງຄົງຢູ່ໃນເວລາແຫ່ງການພັກເຊົາ. ຄົນທີ່ເປັນຜີສາດແມ່ນຜູ້ທີ່ບໍ່ປະຕິບັດຄວາມຈິງ; ທາດແທ້ຂອງພວກເຂົາແມ່ນການຕໍ່ຕ້ານ ແລະ ການບໍ່ເຊື່ອຟັງພຣະເຈົ້າ ແລະ ພວກເຂົາບໍ່ມີຈຸດປະສົງທີ່ຈະເຊື່ອຟັງພຣະເຈົ້າແມ່ນແຕ່ໜ້ອຍດຽວ. ຜູ້ຄົນດັ່ງກ່າວຈະຖືກທຳລາຍທັງໝົດ. ການທີ່ເຈົ້າຈະມີຄວາມຈິງ ແລະ ການທີ່ເຈົ້າຈະຕໍ່ຕ້ານພຣະເຈົ້າແມ່ນຂຶ້ນຢູ່ກັບທາດແທ້ຂອງເຈົ້າ, ບໍ່ແມ່ນຂຶ້ນຢູ່ກັບລັກສະນະຂອງເຈົ້າ ຫຼື ວິທີທີ່ເຈົ້າອາດເວົ້າ ຫຼື ປະພຶດຕົນເອງ. ການທີ່ບຸກຄົນໃດໜຶ່ງຈະຖືກທຳລາຍ ຫຼື ບໍ່ ແມ່ນກຳນົດໂດຍທາດແທ້ຂອງຄົນໆນັ້ນ; ມັນຖືກຕັດສິນອີງຕາມທາດແທ້ທີ່ເປີດເຜີຍອອກໂດຍການກະທຳ ແລະ ການສະແຫວງຫາຄວາມຈິງຂອງພວກເຂົາ. ໃນບັນດາຜູ້ທີ່ເຮັດພາລະກິດຄືກັນ ແລະ ເຮັດພາລະກິດເທົ່າກັນ, ຜູ້ທີ່ມີທາດແທ້ຂອງມະນຸດທີ່ດີ ແລະ ຜູ້ທີ່ມີຄວາມຈິງ ແມ່ນຜູ້ທີ່ສາມາດຄົງຢູ່, ໃນຂະນະຜູ້ທີ່ມີທາດແທ້ຊົ່ວຂອງມະນຸດ ແລະ ຜູ້ທີ່ບໍ່ເຊື່ອຟັງພຣະເຈົ້າທີ່ເບິ່ງເຫັນໄດ້ແມ່ນຄົນທີ່ຈະເປັນເປົ້າໝາຍແຫ່ງການທຳລາຍ. ພາລະກິດ ຫຼື ພຣະທຳທັງໝົດຂອງພຣະເຈົ້າທີ່ກ່ຽວຂ້ອງກັບຈຸດໝາຍປາຍທາງຂອງມະນຸດ ແມ່ນຈະໄດ້ຈັດການກັບມະນຸດຢ່າງເໝາະສົມ ໂດຍອີງໃສ່ທາດແທ້ຂອງມະນຸດແຕ່ລະຄົນ; ຈະບໍ່ມີຄວາມຜິດພາດເກີດຂຶ້ນແມ່ນແຕ່ໜ້ອຍດຽວ ແລະ ຈະບໍ່ມີຂໍ້ຜິດພາດແມ່ນແຕ່ຂໍ້ດຽວ. ມີພຽງແຕ່ເມື່ອຜູ້ຄົນປະຕິບັດພາລະກິດ ຄວາມຮູ້ສຶກ ຫຼື ຄວາມໝາຍຂອງມະນຸດຈຶ່ງຈະປະສົມປະສານກັນ. ພາລະກິດທີ່ພຣະເຈົ້າເຮັດແມ່ນເໝາະສົມທີ່ສຸດ; ພຣະອົງຈະບໍ່ນຳເອົາຄຳກ່າວອ້າງທີ່ບໍ່

ຖືກຕ້ອງມາສູ່ສິ່ງທີ່ມີຊີວິດຢ່າງເດັດຂາດ. ໃນປັດຈຸບັນນີ້ມີຫຼາຍຄົນທີ່ບໍ່ສາມາດເຂົ້າໃຈຈຸດໝາຍປາຍທາງຂອງມະນຸດຊາດໃນອະນາຄົດ ແລະ ບໍ່ເຊື່ອໃນພຣະທຳທີ່ເຮົາກ່າວ; ທຸກຄົນທີ່ບໍ່ເຊື່ອ ພ້ອມທັງຜູ້ທີ່ບໍ່ປະຕິບັດຄວາມຈິງແມ່ນພວກຜີສາດ!

ທຸກມື້ນີ້ ຜູ້ທີ່ສະແຫວງຫາ ແລະ ຜູ້ທີ່ບໍ່ສະແຫວງຫາ ແມ່ນກຸ່ມຄົນສອງປະເພດທີ່ແຕກຕ່າງກັນເຊິ່ງຈຸດໝາຍປາຍທາງຂອງພວກເຂົາກໍຍັງແຕກຕ່າງກັນອີກດ້ວຍ. ຜູ້ທີ່ສະແຫວງຫາຄວາມຮູ້ກ່ຽວກັບຄວາມຈິງ ແລະ ປະຕິບັດຄວາມຈິງ ແມ່ນຄົນທີ່ພຣະເຈົ້າຈະຊ່ວຍໃຫ້ລອດພົ້ນ. ຜູ້ທີ່ບໍ່ຮູ້ວິທີທາງທີ່ແທ້ຈິງ ແມ່ນຜີສາດ ແລະ ສັດຕູ; ພວກເຂົາເປັນເຊື້ອສາຍຂອງເທວະທູດ ແລະ ຈະເປັນເປົ້າໝາຍແຫ່ງການທຳລາຍ. ແມ່ນແຕ່ຜູ້ທີ່ເຊື່ອຢ່າງຕາຍໃຈໃນພຣະເຈົ້າເລື່ອນລອຍ, ພວກເຂົາບໍ່ແມ່ນພວກຜີສາດເຊັ່ນກັນບໍ? ຜູ້ຄົນທີ່ມີຈິດສຳນຶກດີແຕ່ບໍ່ຍອມຮັບວິທີທາງທີ່ແທ້ຈິງແມ່ນພວກຜີສາດ; ທາດແທ້ຂອງພວກເຂົາແມ່ນການຕໍ່ຕ້ານພຣະເຈົ້າ. ຜູ້ທີ່ບໍ່ຍອມຮັບວິທີທາງທີ່ແທ້ຈິງແມ່ນຜູ້ທີ່ຕໍ່ຕ້ານພຣະເຈົ້າ ແລະ ເຖິງແມ່ນວ່າຄົນດັ່ງກ່າວຈະຜະເຊີນກັບຄວາມລຳບາກນາໆປະການກໍຕາມ, ພວກເຂົາກໍຍັງຈະຖືກທຳລາຍ. ຜູ້ທີ່ບໍ່ເຕັມໃຈທີ່ຈະປະຖິ້ມທາງໂລກ, ຜູ້ທີ່ບໍ່ສາມາດຮັບການພັດພາກຈາກພໍ່ແມ່ຂອງພວກເຂົາ ແລະ ຜູ້ທີ່ບໍ່ສາມາດຍອມກຳຈັດຄວາມສຸກຂອງຕົນເອງຈາກຝ່າຍເນື້ອໜັງ ແມ່ນຜູ້ທີ່ບໍ່ເຊື່ອຟັງພຣະເຈົ້າ ແລະ ຈະເປັນເປົ້າໝາຍແຫ່ງການທຳລາຍ. ໃຜກໍຕາມທີ່ບໍ່ເຊື່ອໃນການບັງເກີດເປັນມະນຸດຂອງພຣະເຈົ້າແມ່ນຜີສາດ; ແລະ ຍິ່ງໄປກວ່ານັ້ນ, ພວກເຂົາຈະຖືກທຳລາຍ. ຜູ້ທີ່ມີຄວາມເຊື່ອແຕ່ບໍ່ປະຕິບັດຄວາມຈິງ, ຜູ້ທີ່ບໍ່ເຊື່ອໃນການບັງເກີດເປັນມະນຸດຂອງພຣະເຈົ້າ ແລະ ຜູ້ທີ່ບໍ່ເຊື່ອໃນການມີຢູ່ຂອງພຣະເຈົ້າຈະເປັນເປົ້າໝາຍຂອງການທຳລາຍ. ຄົນທີ່ຈະຖືກອະນຸຍາດໃຫ້ຄົງຢູ່ ແມ່ນຄົນທີ່ໄດ້ຜ່ານການທົນທຸກຂອງການຫຼໍ່ຫຼອມ ແລະ ຢືນຢັດຢ່າງໝັ້ນຄົງ; ນີ້ແມ່ນຄົນທີ່ໄດ້ຜ່ານການທົດລອງຢ່າງແທ້ຈິງ. ໃຜກໍຕາມທີ່ບໍ່ຮູ້ຈັກພຣະເຈົ້າຄືສັດຕູ; ນັ້ນກໍຄື ໃຜກໍຕາມທີ່ບໍ່ຮູ້ຈັກພຣະເຈົ້າທີ່ບັງເກີດເປັນມະນຸດ, ບໍ່ວ່າພວກເຂົາຈະຢູ່ພາຍໃນ ຫຼື ພາຍນອກກະແສນີ້ກໍຕາມຖືວ່າເປັນຜູ້ຕໍ່ຕ້ານພຣະຄຣິດ! ໃຜແມ່ນຊາຕານ, ໃຜແມ່ນຜີສາດ ແລະ ໃຜແມ່ນສັດຕູຂອງພຣະເຈົ້າ ຖ້າບໍ່ແມ່ນຜູ້ຕໍ່ຕ້ານທີ່ບໍ່ເຊື່ອໃນພຣະເຈົ້າ? ພວກເຂົາບໍ່ແມ່ນຄົນທີ່ບໍ່ເຊື່ອຟັງພຣະເຈົ້າບໍ? ພວກເຂົາບໍ່ແມ່ນຜູ້ທີ່ອ້າງວ່າມີຄວາມເຊື່ອ ແຕ່ປາສະຈາກຄວາມຈິງບໍ? ພວກເຂົາບໍ່ແມ່ນຜູ້ທີ່ພຽງແຕ່ສະແຫວງຫາເພື່ອໄດ້ຮັບພອນ ໃນຂະນະທີ່ບໍ່ສາມາດເປັນພະຍານຕໍ່ພຣະເຈົ້າບໍ? ເຈົ້າຍັງຜູກພັນກັບພວກຜີສາດເຫຼົ່ານັ້ນໃນປັດຈຸບັນ ແລະ ສະແດງມະໂນທຳ ແລະ ຄວາມຮັກກັບພວກເຂົາ; ແລ້ວໃນກໍລະນີນີ້ເຈົ້າບໍ່ແມ່ນຂະຫຍາຍຄວາມຕັ້ງໃຈທີ່ດີໃຫ້ກັບຊາຕານບໍ? ເຈົ້າບໍ່ໄດ້ສົມຮູ້ຮ່ວມຄິດ ກັບພວກຜີສາດບໍ? ຖ້າຜູ້ຄົນທຸກມື້ນີ້ຍັງບໍ່ສາມາດແຍກແຍະລະຫວ່າງຄວາມດີ ແລະ ຄວາມຊົ່ວ ແລະ ສືບຕໍ່ສະແດງຄວາມຮັກ ແລະ ຄວາມເມດຕາຢ່າງຕາບອດໂດຍບໍ່ມີຄວາມຕັ້ງໃຈທີ່ຈະສະແຫວງຫາຄວາມປະສົງຂອງພຣະເຈົ້າ ຫຼື ບໍ່ສາມາດໃນທຸກວິທີທາງເພື່ອຮັບເອົາເຈດຕະນາຂອງພຣະເຈົ້າມາເປັນຂອງຕົວເອງ, ແລ້ວ ຈຸດຈົບຂອງພວກເຂົາກໍຈະເປັນຕາສົມເພດຍິ່ງຂຶ້ນ. ໃຜກໍຕາມທີ່ບໍ່ເຊື່ອໃນພຣະເຈົ້າທີ່ຢູ່ໃນເນື້ອໜັງ ແມ່ນສັດຕູຂອງພຣະເຈົ້າ. ຖ້າເຈົ້າສາມາດສະແດງມະໂນທຳ ແລະ ຄວາມຮັກຕໍ່ສັດຕູໄດ້, ເຈົ້າບໍ່ຂາດຄວາມຮູ້ສຶກເຖິງຄວາມຊອບທຳບໍ? ຖ້າເຈົ້າ

ເຂົ້າກັນໄດ້ກັບຄົນທີ່ເຮົາກຽດຊັງ ແລະ ບໍ່ເຫັນດີນຳ ແລະ ຍັງສະແດງຄວາມຮັກ ຫຼື ຄວາມຮູ້ສຶກສ່ວນຕົວກັບພວກເຂົາ, ແລ້ວເຈົ້າບໍ່ແມ່ນຄົນທີ່ບໍ່ເຊື່ອຟັງບໍ? ເຈົ້າບໍ່ໄດ້ຕໍ່ຕ້ານພຣະເຈົ້າໂດຍເຈດຕະນາບໍ? ຄົນແບບນີ້ມີຄວາມຈິງບໍ? ຖ້າຄົນສະແດງມະໂນທຳຕໍ່ສັດຕູ, ສະແດງຄວາມຮັກຕໍ່ພວກຜີສາດ ແລະ ຄວາມເມດຕາຕໍ່ຊາຕານ, ແລ້ວພວກເຂົາບໍ່ໄດ້ຂັດຂວາງພາລະກິດຂອງພຣະເຈົ້າໂດຍເຈດຕະນາບໍ? ຜູ້ຄົນທີ່ເຊື່ອພຽງແຕ່ໃນພຣະເຢຊູ ແລະ ບໍ່ເຊື່ອໃນພຣະເຈົ້າທີ່ບັງເກີດເປັນມະນຸດໃນຍຸກສຸດທ້າຍພ້ອມທັງຜູ້ທີ່ກ່າວອ້າງວ່າ ເຊື່ອໃນພຣະເຈົ້າທີ່ບັງເກີດເປັນມະນຸດ ແຕ່ພັດເຮັດຄວາມຊົ່ວແມ່ນຜູ້ຕໍ່ຕ້ານພຣະຄຣິດທັງໝົດ, ນີ້ຍັງບໍ່ໄດ້ເວົ້າເຖິງຜູ້ທີ່ເຖິງຂັ້ນບໍ່ເຊື່ອໃນພຣະເຈົ້າເລີຍ. ຜູ້ຄົນເຫຼົ່ານີ້ຈະເປັນເປົ້າໝາຍຂອງການທຳລາຍທັງໝົດ. ມາດຕະຖານທີ່ມະນຸດໃຊ້ຕັດສິນມະນຸດແມ່ນອີງໃສ່ພຶດຕິກຳຂອງພວກເຂົາ; ຜູ້ທີ່ມີພຶດຕິກຳດີເປັນຄົນຊອບທຳ ແລະ ຄົນທີ່ມີພຶດຕິກຳທີ່ໜ້າລັງກຽດແມ່ນເປັນຄົນຊົ່ວ. ມາດຕະຖານທີ່ພຣະເຈົ້າໃຊ້ພິພາກສາມະນຸດແມ່ນອີງໃສ່ວ່າ ທາດແທ້ຂອງພວກເຂົາແມ່ນເຊື່ອຟັງພຣະອົງ ຫຼື ບໍ່; ຜູ້ທີ່ເຊື່ອຟັງພຣະເຈົ້າແມ່ນເປັນຄົນທີ່ຊອບທຳ ແລະ ຄົນທີ່ບໍ່ເຊື່ອຟັງພຣະເຈົ້າແມ່ນເປັນສັດຕູ ແລະ ເປັນຄົນຊົ່ວ ໂດຍບໍ່ວ່າຄົນນັ້ນຈະມີພຶດຕິກຳທີ່ດີ ຫຼື ບໍ່ດີ ແລະ ບໍ່ວ່າຄຳເວົ້າຂອງພວກເຂົາຈະຖືກຕ້ອງ ຫຼື ບໍ່ຖືກຕ້ອງ. ບາງຄົນປາດຖະໜານຳໃຊ້ການກະທຳທີ່ດີ ເພື່ອໃຫ້ໄດ້ຈຸດໝາຍປາຍທາງທີ່ດີໃນອະນາຄົດ ແລະ ບາງຄົນປາດຖະໜານຳໃຊ້ຄຳເວົ້າທີ່ດີເພື່ອຮັບເອົາຈຸດໝາຍປາຍທາງທີ່ດີ. ທຸກຄົນເຊື່ອຜິດໆວ່າ ພຣະເຈົ້າກຳນົດຜົນໄດ້ຮັບຂອງມະນຸດຫຼັງຈາກໄດ້ເບິ່ງພຶດຕິກຳ ຫຼື ຫຼັງຈາກໄດ້ຟັງຄຳເວົ້າຂອງພວກເຂົາ; ດັ່ງນັ້ນ ຫຼາຍຄົນຈຶ່ງມີປະສົງທີ່ຈະໃຊ້ສິ່ງນີ້ ເພື່ອລໍ້ລວງພຣະເຈົ້າໃຫ້ພໍໃຈພວກເຂົາຊົ່ວຄາວ. ໃນອະນາຄົດ ຜູ້ຄົນທີ່ຈະມີຊີວິດລອດໃນສະພາບທີ່ສະຫງົບສຸກ ຈະຕ້ອງໄດ້ທົນຕໍ່ວັນແຫ່ງຄວາມຍາກລຳບາກ ແລະ ຍັງຈະໄດ້ເປັນພະຍານໃຫ້ກັບພຣະເຈົ້າອີກດ້ວຍ; ພວກເຂົາທັງໝົດຈະເປັນຄົນທີ່ເຮັດສຳເລັດໜ້າທີ່ຂອງພວກເຂົາ ແລະ ເປັນຄົນທີ່ຕັ້ງໃຈເຊື່ອຟັງພຣະເຈົ້າ. ຜູ້ທີ່ພຽງແຕ່ຕ້ອງການໃຊ້ໂອກາດ ເພື່ອເຮັດການຮັບໃຊ້ດ້ວຍຕັ້ງໃຈ ເພື່ອຫຼີກເວັ້ນການປະຕິບັດຄວາມຈິງຈະບໍ່ຖືກອະນຸຍາດໃຫ້ຄົງຢູ່ໄດ້. ພຣະເຈົ້າແມ່ນມີມາດຕະຖານທີ່ເໝາະສົມສຳລັບການຈັດແຈງຜົນໄດ້ຮັບຂອງທຸກຄົນ; ພຣະອົງບໍ່ພຽງແຕ່ເຮັດການຕັດສິນໃຈເຫຼົ່ານີ້ຕາມຄຳເວົ້າ ແລະ ພຶດຕິກຳຂອງຄົນເທົ່ານັ້ນ ຫຼື ພຣະອົງບໍ່ໄດ້ຕັດສິນໃຈຕາມການກະທຳຂອງພວກເຂົາໃນເວລາໃດໜຶ່ງເທົ່ານັ້ນ. ພຣະອົງຈະບໍ່ຜ່ອນຜັນຕໍ່ການກະທຳຊົ່ວຮ້າຍຂອງຄົນຢ່າງເດັດຂາດຍ້ອນການຮັບໃຊ້ພຣະເຈົ້າຜ່ານມາຂອງພວກເຂົາ ແລະ ພຣະອົງຈະບໍ່ລະເວັ້ນຜູ້ໃດຈາກຄວາມຕາຍຍ້ອນວ່າພວກເຂົາໄດ້ເສຍສະຫຼະຄັ້ງໃດຄັ້ງໜຶ່ງໃຫ້ກັບພຣະເຈົ້າ ທີ່ບໍ່ມີໃຜສາມາດຫຼີກເວັ້ນການລົງໂທດຕໍ່ຄວາມຊົ່ວຮ້າຍຂອງພວກເຂົາ ແລະ ບໍ່ມີໃຜສາມາດປົກປິດການກະທຳຊົ່ວຮ້າຍຂອງພວກເຂົາ ເພື່ອຫຼີກເວັ້ນການທໍລະມານຈາກການທຳລາຍໄດ້. ຖ້າຜູ້ຄົນສາມາດເຮັດໜ້າທີ່ຂອງພວກເຂົາເອງໄດ້ຢ່າງແທ້ຈິງ, ນັ້ນກໍໝາຍຄວາມວ່າ ບໍ່ວ່າພວກເຂົາຈະໄດ້ຮັບພອນ ຫຼື ຄວາມໂຊກຮ້າຍກໍຕາມ, ພວກເຂົາແມ່ນຊື່ສັດຕໍ່ພຣະເຈົ້າຕະຫຼອດໄປ ແລະ ບໍ່ໄດ້ສະແຫວງຫາລາງວັນ, ຖ້າຜູ້ຄົນມີຄວາມຊື່ສັດຕໍ່ພຣະເຈົ້າເມື່ອເວລາທີ່ພວກເຂົາເຫັນພອນ ແຕ່ເສຍຄວາມຊື່ສັດເມື່ອພວກເຂົາບໍ່ສາມາດເຫັນພອນໃດໆ ແລະ ໃນທີ່ສຸດ ຖ້າພວກເຂົາຍັງບໍ່ສາມາດເປັນພະຍານຕໍ່ພຣະເຈົ້າ

ຫຼື ປະຕິບັດໜ້າທີ່ມອບໝາຍໃຫ້ພວກເຂົາ, ແລ້ວພວກເຂົາກໍ່ຍັງຈະເປັນເປົ້າໝາຍທີ່ຈະຖືກທຳລາຍ ເຖິງແມ່ນພວກເຂົາຈະເຄີຍໃຫ້ການບໍລິການທີ່ຊື່ສັດຕໍ່ພຣະເຈົ້າໃນຄັ້ງໜຶ່ງ. ສະຫຼຸບແລ້ວ, ຄົນຊົ່ວບໍ່ສາມາດຢູ່ລອດໄດ້ຕະຫຼອດການ ຫຼື ພວກເຂົາສາມາດເຂົ້າສູ່ບ່ອນພັກເຊົາໄດ້; ມີພຽງແຕ່ຄົນຊອບທຳເທົ່ານັ້ນທີ່ຈະເປັນເຈົ້ານາຍຂອງການພັກເຊົາ. ຫຼັງຈາກມະນຸດຊາດຢູ່ບົນເສັ້ນທາງທີ່ຖືກຕ້ອງ, ຜູ້ຄົນກໍຈະມີຊີວິດມະນຸດຢ່າງປົກກະຕິ. ພວກເຂົາທັງໝົດຈະເຮັດໜ້າທີ່ຂອງຕົນເອງ ແລະ ມີຄວາມຊື່ສັດຢ່າງໝັ້ນຄົງຕໍ່ພຣະເຈົ້າ. ພວກເຂົາຈະປະຖິ້ມຄວາມບໍ່ເຊື່ອຟັງ ແລະ ອຸປະນິໄສທີ່ເສື່ອມຊາມຂອງພວກເຂົາທັງໝົດ ແລະ ພວກເຂົາຈະດຳລົງຊີວິດເພື່ອພຣະເຈົ້າ ແລະ ຍ້ອນພຣະເຈົ້າ, ພວກເຂົາຈະເຊື່ອຟັງ ແລະ ບໍ່ຕໍ່ຕ້ານ. ພວກເຂົາທຸກຄົນຈະສາມາດເຊື່ອຟັງພຣະເຈົ້າໄດ້ຢ່າງສົມບູນ. ສິ່ງນີ້ຈະເປັນຊີວິດຂອງພຣະເຈົ້າ ແລະ ມະນຸດ; ມັນຈະເປັນຊີວິດຂອງອານາຈັກ ແລະ ມັນຈະເປັນຊີວິດແຫ່ງຄວາມສະຫງົບ.

ຜູ້ທີ່ລາກດຶງລູກຫຼານ ແລະ ຍາດພີ່ນ້ອງທີ່ບໍ່ມີຄວາມເຊື່ອທັງໝົດເຂົ້າໃນຄຣິສຕະຈັກແມ່ນຄົນທີ່ເຫັນແກ່ຕົວທີ່ສຸດ ແລະ ພວກເຂົາແມ່ນພຽງສະແດງຄວາມມີນໍ້າໃຈເທົ່ານັ້ນ. ຄົນເຫຼົ່ານີ້ພຽງແຕ່ສົນໃຈກັບການຖືກຮັກ ໂດຍບໍ່ຄຳນຶງວ່າ ພວກເຂົາເຊື່ອ ຫຼື ບໍ່ ຫຼື ບໍ່ຄຳນຶງວ່າມັນເປັນຄວາມປະສົງຂອງພຣະເຈົ້າ ຫຼື ບໍ່. ບາງຄົນນຳເອົາພັນລະຍາຂອງພວກເຂົາມາຢູ່ຕໍ່ໜ້າພຣະເຈົ້າ ຫຼື ລາກດຶງເອົາພໍ່ແມ່ຂອງພວກເຂົາມາຢູ່ຕໍ່ໜ້າພຣະເຈົ້າ ແລະ ບໍ່ຄຳນຶງວ່າ ພຣະວິນຍານບໍລິສຸດເຫັນດີກັບສິ່ງນີ້ ຫຼື ບໍ່ ຫຼື ປະຕິບັດພາລະກິດໃນພວກເຂົາ ຫຼື ບໍ່, ພວກເຂົາຫຼັບຫູຫຼັບຕາສືບຕໍ່ "ຮັບເອົາຄົນທີ່ມີພອນສະຫວັນ" ເພື່ອພຣະເຈົ້າ. ມັນສາມາດໄດ້ຜົນປະໂຫຍດຫຍັງແນ່ຈາກການແຜ່ຄວາມເມດຕາຕໍ່ຄົນທີ່ບໍ່ມີຄວາມເຊື່ອເຫຼົ່ານີ້? ເຖິງແມ່ນວ່າ ພວກເຂົາ ຜູ້ທີ່ປາສະຈາກການສະຖິດຂອງພຣະວິນຍານບໍລິສຸດຈະດີ້ນຣົນໃນການຕິດຕາມພຣະເຈົ້າ, ພວກເຂົາກໍຍັງຈະບໍ່ສາມາດໄດ້ຮັບການຊ່ວຍໃຫ້ລອດພົ້ນດັ່ງທີ່ຜູ້ຄົນອາດເຂົ້າໃຈ. ທີ່ຈິງແລ້ວ ຜູ້ທີ່ໄດ້ຮັບການຊ່ວຍໃຫ້ລອດພົ້ນນັ້ນບໍ່ແມ່ນໄດ້ຮັບມາແບບງ່າຍໆ. ຜູ້ທີ່ບໍ່ໄດ້ຜ່ານພາລະກິດ ແລະ ການທົດລອງຂອງພຣະວິນຍານບໍລິສຸດ ແລະ ບໍ່ໄດ້ຮັບການເຮັດໃຫ້ສົມບູນໂດຍພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ສະນັ້ນ, ຜູ້ຄົນເຫຼົ່ານີ້ຂາດການສະຖິດຂອງພຣະວິນຍານບໍລິສຸດຕັ້ງແຕ່ວິນາທີທີ່ພວກເຂົາເລີ່ມຕົ້ນຕິດຕາມພຣະເຈົ້າແລ້ວ. ອີງຕາມເງື່ອນໄຂ ແລະ ສະພາບທີ່ແທ້ຈິງຂອງພວກເຂົາ, ພວກເຂົາແມ່ນບໍ່ສາມາດຖືກເຮັດໃຫ້ສົມບູນໄດ້. ດັ່ງນັ້ນ, ພຣະວິນຍານບໍລິສຸດບໍ່ໄດ້ຕັດສິນໃຈທີ່ຈະເສຍເຫື່ອແຮງກັບພວກເຂົາຫຼາຍ ແລະ ພຣະອົງບໍ່ໄດ້ໃຫ້ແສງສະຫວ່າງ ຫຼື ຊີ້ນຳພວກເຂົາໃນທິດທາງໃດເລີຍ; ພຣະອົງພຽງແຕ່ອະນຸຍາດໃຫ້ພວກເຂົາຕິດຕາມ ແລະ ສຸດທ້າຍກໍຈະເປີດເຜີຍຜົນຕາມມາຂອງພວກເຂົາ, ນີ້ແມ່ນພຽງພໍແລ້ວ. ຄວາມກະຕືລືລົ້ນ ແລະ ຄວາມຕັ້ງໃຈຂອງມະນຸດແມ່ນມາຈາກຊາຕານ ແລະ ບໍ່ມີທາງທີ່ສິ່ງເຫຼົ່ານີ້ຈະສາມາດເຮັດສຳເລັດພາລະກິດຂອງພຣະວິນຍານບໍລິສຸດໄດ້. ບໍ່ວ່າຜູ້ຄົນຈະເປັນແນວໃດກໍຕາມ, ພວກເຂົາຕ້ອງມີພາລະກິດຂອງພຣະວິນຍານບໍລິສຸດ. ມະນຸດສາມາດເຮັດໃຫ້ມະນຸດສົມບູນໄດ້ບໍ? ເປັນຫຍັງສາມີຈຶ່ງຮັກພັນລະຍາຂອງຕົນເອງ? ເປັນຫຍັງພັນລະຍາຈຶ່ງຮັກສາມີຂອງນາງ? ເປັນຫຍັງລູກໆຈຶ່ງປະຕິບັດໜ້າທີ່ຂອງພວກເຂົາຕໍ່ພໍ່ແມ່? ເປັນຫຍັງພໍ່ແມ່ຈຶ່ງຮັກລູກໆຂອງພວກເຂົາ? ຜູ້ຄົນມີຄວາມຕັ້ງໃຈ

ແບບໃດກັນແທ້? ຄວາມຕັ້ງໃຈຂອງພວກເຂົາບໍ່ແມ່ນເພື່ອປະຕິບັດຕາມແຜນການ ແລະ ຄວາມປາດຖະໜາທີ່ເຫັນແກ່ຕົວຂອງພວກເຂົາເອງບໍ? ພວກເຂົາຕັ້ງໃຈປະຕິບັດເພື່ອແຜນການຄຸ້ມຄອງຂອງພຣະເຈົ້າແທ້ບໍ? ພວກເຂົາປະຕິບັດເພື່ອພາລະກິດຂອງພຣະເຈົ້າແທ້ບໍ? ຄວາມຕັ້ງໃຈຂອງພວກເຂົາແມ່ນເພື່ອສຳເລັດໜ້າທີ່ຂອງສິ່ງຖືກສ້າງເອງບໍ? ນັບຕັ້ງແຕ່ນາທີທີ່ພວກເຂົາເລີ່ມມີຄວາມເຊື່ອໃນພຣະເຈົ້າ ຜູ້ຄົນແມ່ນບໍ່ສາມາດຮັບການສະຖິດຢູ່ຂອງພຣະວິນຍານບໍລິສຸດ, ບໍ່ສາມາດຮັບພາລະກິດຂອງພຣະວິນຍານບໍລິສຸດ; ຜູ້ຄົນເຫຼົ່ານີ້ໄດ້ຖືກກຳນົດໃຫ້ເປັນເປົ້າໝາຍທີ່ຈະຖືກທຳລາຍ. ບໍ່ວ່າພວກເຂົາຈະມີຄວາມຮັກຫຼາຍເທົ່າໃດກໍຕາມ, ມັນກໍບໍ່ສາມາດທົດແທນພາລະກິດຂອງພຣະວິນຍານບໍລິສຸດໄດ້. ຄວາມກະຕືລືລົ້ນ ແລະ ຄວາມຮັກຂອງຜູ້ຄົນແມ່ນສະແດງເຖິງຄວາມຕັ້ງໃຈຂອງມະນຸດ ແລະ ບໍ່ສາມາດເປັນຕົວແທນເຈດຕະນາຂອງພຣະເຈົ້າໄດ້ ແລະ ທີ່ບໍ່ສາມາດທົດແທນພາລະກິດຂອງພຣະເຈົ້າໄດ້. ເຖິງແມ່ນວ່າ ຄົນຈະສະແດງຄວາມຮັກ ຫຼື ຄວາມເມດຕາຫຼາຍທີ່ສຸດຕໍ່ບັນດາຜູ້ທີ່ເຊື່ອໃນພຣະເຈົ້າພຽງແຕ່ໃນນາມ ແລະ ທຳທ່າຕິດຕາມພຣະອົງໂດຍບໍ່ຮູ້ວ່າ ການເຊື່ອໃນພຣະເຈົ້ານັ້ນໝາຍເຖິງຫຍັງກັນແທ້, ພວກເຂົາກໍຈະບໍ່ໄດ້ຮັບຄວາມເຫັນໃຈຈາກພຣະເຈົ້າ ຫຼື ພວກເຂົາຈະບໍ່ໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດ. ເຖິງແມ່ນວ່າຄົນທີ່ຕິດຕາມພຣະເຈົ້າຢ່າງຈິງໃຈຈະມີຄວາມສາມາດຕໍ່າ ແລະ ບໍ່ສາມາດເຂົ້າໃຈຄວາມຈິງຫຼາຍຢ່າງ, ທີ່ພວກເຂົາຍັງສາມາດໄດ້ຮັບພາລະກິດຂອງພຣະວິນຍານບໍລິສຸດເປັນຄັ້ງຄາວ, ຜູ້ທີ່ມີຄວາມສາມາດສູງ ແຕ່ບໍ່ເຊື່ອຢ່າງຈິງໃຈແມ່ນບໍ່ສາມາດໄດ້ຮັບການສະຖິດຂອງພຣະວິນຍານບໍລິສຸດໄດ້. ບໍ່ມີທາງເປັນໄປໄດ້ເດັດຂາດທີ່ຈະຊ່ວຍຄົນເຫຼົ່ານີ້ໃຫ້ລອດພົ້ນ. ເຖິງແມ່ນວ່າພວກເຂົາຈະອ່ານພຣະທຳຂອງພຣະເຈົ້າ ຫຼື ບາງຄັ້ງໄດ້ຟັງຄຳເທດສະໜາ ຫຼື ເຖິງກັບຮ້ອງເພງສັນລະເສີນພຣະເຈົ້າ, ໃນທີ່ສຸດ ພວກເຂົາກໍຈະບໍ່ສາມາດມີຊີວິດຢູ່ຕໍ່ໄປຈົນເຖິງເວລາແຫ່ງການພັກເຊົາໄດ້. ການທີ່ຄົນສະແຫວງຫາດ້ວຍຄວາມຈິງໃຈ ແມ່ນບໍ່ໄດ້ກຳນົດດ້ວຍການຕັດສິນຂອງຄົນອື່ນ ຫຼື ດ້ວຍວິທີທີ່ຄົນອ້ອມຂ້າງເບິ່ງພວກເຂົາ ແຕ່ຂຶ້ນຢູ່ກັບວ່າ ພຣະວິນຍານບໍລິສຸດປະຕິບັດພາລະກິດກັບພວກເຂົາ ຫຼື ບໍ່ ແລະ ຂຶ້ນກັບວ່າ ພວກເຂົາໄດ້ຮັບການສະຖິດຂອງພຣະວິນຍານບໍລິສຸດ ຫຼື ບໍ່. ຍິ່ງໄປກວ່ານັ້ນ ມັນຂຶ້ນຢູ່ກັບວ່າອຸປະນິໄສຂອງພວກເຂົາປ່ຽນແປງ ຫຼື ບໍ່ ຫຼື ຂຶ້ນກັບວ່າພວກເຂົາມີຄວາມຮູ້ກ່ຽວກັບພຣະເຈົ້າ ຫຼື ບໍ່ ຫຼັງຈາກທີ່ໄດ້ຜ່ານພາລະກິດຂອງພຣະວິນຍານບໍລິສຸດໃນເວລາໃດໜຶ່ງ. ຖ້າພຣະວິນຍານບໍລິສຸດປະຕິບັດພາລະກິດຕໍ່ບຸກຄົນໃດໜຶ່ງ, ອຸປະນິໄສຂອງບຸກຄົນນັ້ນກໍຈະຄ່ອຍໆປ່ຽນແປງ ແລະ ມຸມມອງຂອງພວກເຂົາກ່ຽວກັບການເຊື່ອໃນພຣະເຈົ້າກໍຈະຄ່ອຍໆບໍລິສຸດຂຶ້ນ. ບໍ່ວ່າຜູ້ຄົນຈະຕິດຕາມພຣະເຈົ້າເປັນເວລາດົນນານເທົ່າໃດກໍຕາມ, ຕາບໃດທີ່ພວກເຂົາໄດ້ປ່ຽນແປງ, ມັນກໍໝາຍຄວາມວ່າ ພຣະວິນຍານບໍລິສຸດກຳລັງປະຕິບັດພາລະກິດກັບພວກເຂົາ. ຖ້າພວກເຂົາບໍ່ປ່ຽນແປງ, ນັ້ນກໍໝາຍຄວາມວ່າ ພຣະວິນຍານບໍລິສຸດບໍ່ໄດ້ປະຕິບັດພາລະກິດກັບພວກເຂົາ. ເຖິງແມ່ນວ່າຜູ້ຄົນເຫຼົ່ານີ້ໄດ້ເຮັດວຽກງານຮັບໃຊ້ບາງຢ່າງ, ແຕ່ສິ່ງທີ່ກະຕຸ້ນພວກເຂົາໃຫ້ເຮັດແບບນັ້ນຄືຄວາມປາຖະໜາຢາກຮັບການອວຍພອນ. ພຽງປະຕິບັດຮັບໃຊ້ບໍລິການບາງຄັ້ງຄາວບໍ່ສາມາດທົດແທນປະສົບການການປ່ຽນແປງໃນອຸປະນິໄສຂອງພວກເຂົາໄດ້. ໃນທີ່ສຸດ ພວກເຂົາກໍຍັງຈະຖືກ

ທຳລາຍ ເພາະບໍ່ມີຄວາມຈຳເປັນຕ້ອງມີຜູ້ບໍລິການປະເພດນີ້ໃນອານາຈັກ ແລະ ບໍ່ມີຄວາມຈຳເປັນຕ້ອງມີຄົນທີ່ບໍ່ມີການປ່ຽນແປງອຸປະນິໄສ ເພື່ອມາບໍລິການຜູ້ທີ່ຖືກເຮັດໃຫ້ສົມບູນ ແລະ ຜູ້ທີ່ມີຄວາມຊື່ສັດຕໍ່ພຣະເຈົ້າ. ພຣະທຳເຫຼົ່ານັ້ນທີ່ກ່າວໃນອະດີດທີ່ວ່າ: "ເມື່ອຄົນໃດເຊື່ອໃນພຣະຜູ້ເປັນເຈົ້າ, ໂຊກລາບກໍຈະມີແກ່ຄອບຄົວຂອງຄົນໆນັ້ນ" ແມ່ນເໝາະສົມສຳລັບຍຸກແຫ່ງພຣະຄຸນ ແຕ່ມັນບໍ່ກ່ຽວກັບຈຸດໝາຍປາຍທາງຂອງມະນຸດ. ພຣະທຳເຫຼົ່ານັ້ນເໝາະສົມກັບຍຸກແຫ່ງພຣະຄຸນເທົ່ານັ້ນ. ຄວາມໝາຍຂອງພຣະທຳເຫຼົ່ານັ້ນແມ່ນແນໃສ່ຄວາມສະຫງົບສຸກ ແລະ ພອນແຫ່ງວັດຖຸທີ່ຜູ້ຄົນໄດ້ຮັບ; ມັນບໍ່ໄດ້ໝາຍຄວາມວ່າ ທັງໝົດຄອບຄົວຂອງຜູ້ທີ່ເຊື່ອໃນພຣະຜູ້ເປັນເຈົ້າຈະໄດ້ຮັບການຊ່ວຍໃຫ້ລອດພົ້ນ ແລະບໍ່ໄດ້ໝາຍຄວາມວ່າ ເມື່ອຄົນໃດໜຶ່ງຮັບການອວຍພອນ, ທັງໝົດຄອບຄົວຂອງຄົນນັ້ນກໍ່ສາມາດຖືກນຳພາໄປສູ່ບ່ອນພັກເຊົາເຊັ່ນກັນ. ການທີ່ຄົນໃດໜຶ່ງໄດ້ຮັບພອນ ຫຼື ທົນທຸກກັບຄວາມໂຊກຮ້າຍແມ່ນຖືກກຳນົດຕາມທາດແທ້ຂອງຄົນນັ້ນ ແລະ ບໍ່ໄດ້ຖືກກຳນົດຕາມທາດແທ້ທີ່ຄົນນັ້ນມີຄືກັນກັບຄົນອື່ນໆ. ອານາຈັກບໍ່ມີຄຳກ່າວ ຫຼື ກົດລະບຽບແບບນີ້. ຖ້າຄົນໃດໜຶ່ງສາມາດຢູ່ລອດໄດ້ໃນທີ່ສຸດ ນັ້ນກໍຍ້ອນວ່າ ຄົນໆນັ້ນໄດ້ບັນລຸເງື່ອນໄຂຂອງພຣະເຈົ້າ ແລະ ຖ້າຫາກວ່າ ຄົນນັ້ນບໍ່ສາມາດຢູ່ລອດຈົນເຖິງເວລາແຫ່ງການພັກເຊົາ ນັ້ນກໍຍ້ອນວ່າ ບຸກຄົນດັ່ງກ່າວບໍ່ເຊື່ອຟັງພຣະເຈົ້າ ແລະ ບໍ່ສາມາດຕອບສະໜອງຕາມເງື່ອນໄຂຂອງພຣະເຈົ້າໄດ້. ທຸກຄົນແມ່ນມີຈຸດໝາຍປາຍທາງທີ່ເໝາະສົມ. ເຊິ່ງຈຸດໝາຍປາຍທາງເຫຼົ່ານີ້ແມ່ນໄດ້ຖືກກຳນົດຕາມທາດແທ້ຂອງແຕ່ລະຄົນ ແລະ ບໍ່ໄດ້ກ່ຽວຂ້ອງກັບຄົນອື່ນໆຢ່າງສິ້ນເຊີງ. ການກະທຳຊົ່ວຮ້າຍຂອງລູກບໍ່ສາມາດໂອນໄປໃຫ້ພໍ່ແມ່ຂອງພວກເຂົາໄດ້ ແລະ ຄວາມຊອບທຳຂອງລູກກໍບໍ່ສາມາດແບ່ງປັນກັບພໍ່ແມ່ຂອງພວກເຂົາໄດ້. ການກະທຳທີ່ຊົ່ວຮ້າຍຂອງພໍ່ແມ່ບໍ່ສາມາດໂອນໄປໃຫ້ລູກໆຂອງພວກເຂົາໄດ້ ແລະ ຄວາມຊອບທຳຂອງພໍ່ແມ່ກໍບໍ່ສາມາດແບ່ງປັນກັບລູກໆຂອງພວກເຂົາໄດ້. ທຸກຄົນແມ່ນແບກຮັບບາບກຳຂອງຕົນເອງ ແລະ ທຸກຄົນແມ່ນເສບສຸກກັບພອນຂອງຕົນເອງ. ບໍ່ມີໃຜສາມາດທົດແທນຄົນອື່ນໄດ້; ນີ້ແມ່ນຄວາມຊອບທຳ. ໃນມຸມມອງຂອງມະນຸດ, ຖ້າພໍ່ແມ່ຮັບພອນ, ລູກໆຂອງພວກເຂົາກໍຈະໄດ້ຮັບເຊັ່ນກັນ ແລະ ຖ້າລູກໆເຮັດຄວາມຊົ່ວ, ພໍ່ແມ່ຂອງພວກເຂົາກໍຕ້ອງຊົດໃຊ້ຄວາມບາບເຫຼົ່ານັ້ນ. ນີ້ແມ່ນມຸມມອງຂອງມະນຸດ ແລະ ວິທີການກະທຳສິ່ງຕ່າງໆຂອງມະນຸດ. ມັນບໍ່ແມ່ນມຸມມອງຂອງພຣະເຈົ້າ. ຜົນໄດ້ຮັບຂອງແຕ່ລະຄົນແມ່ນຖືກກຳນົດຕາມທາດແທ້ທີ່ເກີດຈາກການກະທຳຂອງພວກເຂົາ ແລະ ມັນຖືກກຳນົດຢ່າງເໝາະສົມສະເໝີ. ບໍ່ມີໃຜສາມາດແບກຮັບບາບຂອງຄົນອື່ນໄດ້; ແຮງຍິ່ງໄປກວ່ານັ້ນ, ບໍ່ມີໃຜສາມາດຮັບໂທດແທນຄົນອື່ນໄດ້. ນີ້ແມ່ນສິ່ງທີ່ແນ່ນອນທີ່ສຸດ. ການດູແລຢ່າງຖະໜອມຂອງພໍ່ແມ່ຕໍ່ລູກຂອງພວກເຂົາບໍ່ໄດ້ໝາຍຄວາມວ່າພວກເຂົາສາມາດປະຕິບັດສິ່ງທີ່ຊອບທຳແທນລູກໆຂອງພວກເຂົາໄດ້ ຫຼື ຄວາມຮັກກະຕັນຍູຂອງລູກໆທີ່ມີຕໍ່ພໍ່ແມ່ຂອງພວກເຂົາ ໝາຍຄວາມວ່າ ພວກເຂົາສາມາດປະຕິບັດສິ່ງທີ່ຊອບທຳແທນພໍ່ແມ່ຂອງພວກເຂົາໄດ້. ນີ້ຄືຄວາມໝາຍທີ່ແທ້ຈິງຂອງຂໍ້ພຣະທຳທີ່ວ່າ: "ແລ້ວໃນທົ່ງນາມີຊາຍສອງຄົນ; ຄົນໜຶ່ງຈະຖືກຮັບໄປ ແລະ ອີກຄົນຈະຖືກປະຖິ້ມ. ຍິງສອງຄົນກຳລັງບົດແປ້ງຢູ່ໃນໂຮງເຮັດແປ້ງ; ຄົນໜຶ່ງຈະຖືກຮັບໄປ ແລະ ອີກຄົນຈະຖືກປະຖິ້ມ". ຜູ້ຄົນບໍ່ສາມາດນຳເອົາລູກໆຂອງພວກເຂົາ ທີ່ເຮັດສິ່ງຊົ່ວຮ້າຍ

ໄປສູ່ບ່ອນພັກເຊົາໄດ້ໃນບົນພື້ນຖານຄວາມຮັກອັນເລິກເຊິ່ງຂອງພວກເຂົາທີ່ມີຕໍ່ລູກໆ ແລະ ບໍ່ມີໃຜສາມາດເອົາເມຍ (ຫຼືຜົວ) ຂອງພວກເຂົາໄປສູ່ບ່ອນພັກເຊົາໄດ້ບົນພື້ນຖານການປະພຶດທີ່ຊອບທຳຂອງຕົນເອງ. ສິ່ງນີ້ແມ່ນກົດແຫ່ງການປົກຄອງ; ບໍ່ມີຂໍ້ຍົກເວັ້ນຕໍ່ບຸກຄົນໃດໆ. ສຸດທ້າຍກໍຄື ຜູ້ທີ່ປະຕິບັດຄວາມຊອບທຳແມ່ນຜູ້ປະຕິບັດຄວາມຊອບທຳ ແລະ ຜູ້ທີ່ກະທຳຄວາມຊົ່ວແມ່ນຜູ້ທີ່ກະທຳຄວາມຊົ່ວ. ຜູ້ທີ່ປະຕິບັດຄວາມຊອບທຳ ໃນທີ່ສຸດ ກໍຈະຖືກອະນຸຍາດໃຫ້ຢູ່ລອດ ໃນຂະນະຜູ້ທີ່ກະທຳຄວາມຊົ່ວຈະຖືກທຳລາຍ. ຜູ້ທີ່ບໍລິສຸດແມ່ນຜູ້ທີ່ບໍລິສຸດ; ພວກເຂົາບໍ່ສົກກະປົກ. ຜູ້ທີ່ສົກກະປົກແມ່ນຜູ້ທີ່ສົກກະປົກ ແລະ ບໍ່ມີພາກສ່ວນໃດຂອງພວກເຂົາບໍລິສຸດ. ຜູ້ຄົນທີ່ຈະຖືກທຳລາຍແມ່ນລ້ວນແລ້ວແຕ່ເປັນຄົນຊົ່ວ ແລະ ຜູ້ຄົນທີ່ຈະມີຊີວິດລອດລ້ວນແລ້ວແຕ່ເປັນຄົນຊອບທຳ, ແມ່ນແຕ່ ລູກໆຂອງຄົນຊົ່ວທີ່ໄດ້ເຮັດສິ່ງທີ່ຊອບທຳ ແລະ ແມ່ນແຕ່ ພໍ່ແມ່ຂອງຄົນຊອບທຳທີ່ໄດ້ເຮັດຄວາມຊົ່ວ. ບໍ່ມີຄວາມສຳພັນ ລະຫວ່າງຜົວທີ່ເຊື່ອ ແລະ ເມຍທີ່ບໍ່ເຊື່ອ ແລະ ບໍ່ມີຄວາມສຳພັນລະຫວ່າງລູກໆທີ່ເຊື່ອ ແລະ ພໍ່ແມ່ທີ່ບໍ່ເຊື່ອ; ຄົນສອງປະເພດເຫຼົ່ານີ້ແມ່ນບໍ່ກ່ຽວຂ້ອງກັນ. ກ່ອນທີ່ຈະກ້າວເຂົ້າໄປຢູ່ໃນບ່ອນພັກເຊົາ, ຄົນໃດໜຶ່ງແມ່ນມີຍາດຕິພີ່ນ້ອງເປັນຕົວຕົນ ແຕ່ເມື່ອພວກເຂົາໄດ້ເຂົ້າໄປສູ່ບ່ອນພັກເຊົາ ພວກເຂົາຈະບໍ່ມີຍາດຕິພີ່ນ້ອງທີ່ເປັນຕົວຕົນໃຫ້ກ່າວເຖິງອີກ. ຜູ້ທີ່ເຮັດໜ້າທີ່ຂອງພວກເຂົາເປັນສັດຕູກັບຜູ້ທີ່ບໍ່ເຮັດໜ້າທີ່; ຜູ້ທີ່ຮັກພຣະເຈົ້າ ແລະ ຜູ້ທີ່ກຽດຊັງພຣະອົງແມ່ນຢູ່ກົງກັນຂ້າມກັນ. ຜູ້ທີ່ຈະເຂົ້າສູ່ບ່ອນພັກເຊົາ ແລະ ຜູ້ທີ່ຈະຖືກທຳລາຍແມ່ນສິ່ງມີຊີວິດຄົນລະປະເພດທີ່ບໍ່ຄືກັນ. ສິ່ງມີຊີວິດທີ່ເຮັດສຳເລັດໜ້າທີ່ຂອງພວກເຂົາຈະສາມາດມີຊີວິດລອດ ແລະ ສິ່ງມີຊີວິດທີ່ບໍ່ເຮັດສຳເລັດໜ້າທີ່ຂອງພວກເຂົາຈະເປັນເປົ້າໝາຍຂອງການທຳລາຍ; ຍິ່ງໄປກວ່ານີ້, ສິ່ງນີ້ຈະຍືນຍົງຕະຫຼອດໄປ. ເຈົ້າຮັກສາມີຂອງເຈົ້າເພື່ອປະຕິບັດໜ້າທີ່ຂອງເຈົ້າໃນຖານະທີ່ເປັນສິ່ງຖືກສ້າງບໍ? ເຈົ້າຮັກພັນລະຍາຂອງເຈົ້າເພື່ອປະຕິບັດໜ້າທີ່ຂອງເຈົ້າໃນຖານະທີ່ເປັນສິ່ງຖືກສ້າງບໍ? ເຈົ້າເຊື່ອຟັງພໍ່ແມ່ທີ່ບໍ່ເຊື່ອຂອງເຈົ້າເພື່ອປະຕິບັດໜ້າທີ່ໃນຖານະທີ່ເປັນສິ່ງຖືກສ້າງບໍ? ທັດສະນະຂອງມະນຸດຕໍ່ການເຊື່ອໃນພຣະເຈົ້ານັ້ນຖືກ ຫຼື ບໍ່? ເປັນຫຍັງເຈົ້າຈຶ່ງເຊື່ອໃນພຣະເຈົ້າ? ເຈົ້າຕ້ອງການຢາກໄດ້ຮັບຫຍັງ? ເຈົ້າຮັກພຣະເຈົ້າແນວໃດ? ຜູ້ທີ່ບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາໃນຖານະທີ່ເປັນສິ່ງຖືກສ້າງ ແລະ ຜູ້ທີ່ບໍ່ສາມາດໃຊ້ຄວາມພະຍາຍາມຢ່າງເຕັມທີ່ແມ່ນຈະກາຍເປັນເປົ້າໝາຍຂອງການທຳລາຍ. ຄົນໃນປັດຈຸບັນມີຄວາມສຳພັນທາງດ້ານຮ່າງກາຍຕໍ່ກັນ, ພ້ອມທັງສາຍສຳພັນທາງສາຍເລືອດ ແຕ່ໃນອະນາຄົດສິ່ງເຫຼົ່ານີ້ຈະຖືກທຳລາຍທັງໝົດ. ຜູ້ທີ່ເຊື່ອ ແລະ ຜູ້ທີ່ບໍ່ເຊື່ອແມ່ນເຂົ້າກັນບໍ່ໄດ້ ກົງກັນຂ້າມ ພວກເຂົາຈະຕໍ່ຕ້ານເຊິ່ງກັນແລະກັນ. ຜູ້ທີ່ຢູ່ໃນບ່ອນພັກເຊົາເຊື່ອວ່າ ມີພຣະເຈົ້າ ແລະ ເຊື່ອຟັງພຣະເຈົ້າ ໃນຂະນະຜູ້ທີ່ບໍ່ເຊື່ອຟັງພຣະເຈົ້າຈະຖືກທຳລາຍທັງໝົດ. ຄອບຄົວຈະບໍ່ມີຢູ່ເທິງແຜ່ນດິນໂລກອີກຕໍ່ໄປ; ແລ້ວຈະມີພໍ່ແມ່ ຫຼື ລູກໆ ຫຼື ຄວາມສຳພັນລະຫວ່າງຜົວ ແລະ ເມຍໄດ້ແນວໃດ? ຄວາມເຊື່ອ ແລະ ຄວາມບໍ່ເຊື່ອທີ່ເຂົ້າກັນບໍ່ໄດ້ ສຸດທ້າຍ ກໍຈະຕັດຂາດຄວາມສຳພັນທາງດ້ານຮ່າງກາຍດັ່ງກ່າວຢ່າງສິ້ນເຊີງ!

ແຕ່ຕົ້ນເດີມນັ້ນບໍ່ມີຄອບຄົວລະຫວ່າງມະນຸດຊາດ; ມີພຽງແມ່ຍິງ ແລະ ຜູ້ຊາຍ ເຊິ່ງນັ້ນກໍຄືມະນຸດສອງປະເພດທີ່ແຕກຕ່າງກັນ. ບໍ່ມີປະເທດຕ່າງໆ, ສ່ວນເລື່ອງຄອບຄົວແມ່ນບໍ່ຕ້ອງເວົ້າເຖິງ, ແຕ່

ເນື່ອງຈາກຜົນຂອງການເສື່ອມຊາມຂອງມະນຸດ, ຜູ້ຄົນທຸກປະເພດຈຶ່ງຈັດຕັ້ງຕົນເອງເປັນຊົນເຜົ່າໃຜລາວ ແລ້ວຕໍ່ມາກໍພັດທະນາໄປເປັນປະເທດ ແລະ ເຊື້ອຊາດຕ່າງໆ. ບັນດາປະເທດ ແລະ ເຊື້ອຊາດຕ່າງໆເຫຼົ່ານີ້ປະກອບດ້ວຍຄອບຄົວຂະໜາດນ້ອຍຂອງຕົນເອງ ແລະ ໃນລັກສະນະນີ້ ຄົນທຸກປະເພດຖືກແຜ່ຂະຫຍາຍອອກທ່າມກາງເຊື້ອຊາດຕ່າງໆຕາມຄວາມແຕກຕ່າງທາງດ້ານພາສາ ແລະ ເຂດແດນ. ຄວາມຈິງແລ້ວ, ບໍ່ວ່າໃນໂລກຈະປະກອບມີຈັກເຊື້ອຊາດ, ມະນຸດຊາດມີບັນພະບຸລຸດດຽວກັນ. ໃນຕອນເລີ່ມຕົ້ນ, ມີມະນຸດພຽງແຕ່ສອງປະເພດ ແລະ ສອງປະເພດເຫຼົ່ານີ້ແມ່ນຜູ້ຊາຍ ແລະ ແມ່ຍິງ. ຢ່າງໃດກໍຕາມ, ເນື່ອງຈາກຄວາມກ້າວໜ້າໃນພາລະກິດຂອງພຣະເຈົ້າ, ການເຄື່ອນໄຫວຂອງປະຫວັດສາດ ແລະ ການປ່ຽນແປງທາງພູມສາດ, ໃນລະດັບຕ່າງໆ ມະນຸດທັງສອງປະເພດເຫຼົ່ານີ້ຍິ່ງພັດທະນາອອກເປັນຫຼາກຫຼາຍມະນຸດຍິ່ງຂຶ້ນ. ໂດຍພື້ນຖານແລ້ວ, ບໍ່ວ່າຈະມີເຊື້ອຊາດປະກອບໃນມະນຸດຊາດຫຼາຍພຽງໃດກໍຕາມ, ມະນຸດຊາດທັງປວງກໍຍັງແມ່ນສິ່ງຊົງສ້າງຂອງພຣະເຈົ້າຢູ່ດີ. ບໍ່ວ່າຜູ້ຄົນຈະເປັນເຊື້ອຊາດໃດກໍຕາມ, ພວກເຂົາທັງໝົດກໍຄືສິ່ງມີຊີວິດຂອງພຣະເຈົ້າ; ພວກເຂົາລ້ວນແລ້ວແຕ່ເປັນເຊື້ອສາຍຂອງອາດາມ ແລະ ເອວາ. ເຖິງແມ່ນວ່າພວກເຂົາບໍ່ໄດ້ຖືກສ້າງດ້ວຍມືຂອງພຣະເຈົ້າ, ພວກເຂົາທັງໝົດກໍເປັນເຊື້ອສາຍຂອງອາດາມ ແລະ ເອວາ ຜູ້ທີ່ພຣະເຈົ້າສ້າງດ້ວຍຕົວພຣະອົງເອງ. ບໍ່ວ່າຜູ້ຄົນຈະເປັນຄົນປະເພດໃດກໍຕາມ, ພວກເຂົາທັງໝົດຄືສິ່ງມີຊີວິດຂອງພຣະອົງ; ໃນເມື່ອພວກເຂົາແມ່ນມະນຸດຊາດ ທີ່ຖືກສ້າງໂດຍພຣະເຈົ້າ, ຈຸດໝາຍປາຍທາງຂອງພວກເຂົາກໍຄືສິ່ງທີ່ມະນຸດຄວນມີ ແລະ ພວກເຂົາໄດ້ຖືກແບ່ງອອກຕາມກົດສະບຽບທີ່ຈັດຕັ້ງມະນຸດ. ນັ້ນໝາຍຄວາມວ່າ ສຸດທ້າຍແລ້ວ ຄົນທີ່ເຮັດຊົ່ວ ແລະ ຄົນທີ່ຊອບທຳ ທຸກຄົນກໍຄືສິ່ງທີ່ມີຊີວິດ. ສິ່ງທີ່ມີຊີວິດທີ່ກະທຳຄວາມຊົ່ວຈະຖືກທຳລາຍໃນທີ່ສຸດ ແລະ ສິ່ງທີ່ມີຊີວິດທີ່ກະທຳຄວາມດີຈະມີຊີວິດລອດ. ນີ້ແມ່ນການຈັດແຈງທີ່ເໝາະສົມທີ່ສຸດສຳລັບສິ່ງທີ່ມີຊີວິດທັງສອງປະເພດ. ເນື່ອງຈາກຄວາມບໍ່ເຊື່ອຟັງຂອງພວກເຂົາ, ຄົນທີ່ກະທຳຄວາມຊົ່ວ ເຖິງແມ່ນວ່າພວກເຂົາແມ່ນສິ່ງຊົງສ້າງຂອງພຣະເຈົ້າ ແຕ່ຍ້ອນວ່າພວກເຂົາຖືກຊາຕານຈັບກຸມ, ດ້ວຍເຫດນັ້ນ ຈຶ່ງບໍ່ສາມາດໄດ້ຮັບການຊ່ວຍໃຫ້ລອດພົ້ນໄດ້. ສິ່ງມີຊີວິດທີ່ກະທຳຄວາມດີ ບໍ່ສາມາດລອດພົ້ນໄດ້ບົນຖານຄວາມຈິງທີ່ວ່າ ພວກເຂົາຖືກສ້າງຂຶ້ນໂດຍພຣະເຈົ້າ ແຕ່ໄດ້ຮັບການຊ່ວຍໃຫ້ລອດພົ້ນຫຼັງຈາກທີ່ຊາຕານໄດ້ເຮັດໃຫ້ພວກເຂົາເສື່ອມຊາມ. ເຊິ່ງຄົນທີ່ກະທຳຊົ່ວແມ່ນສິ່ງມີຊີວິດທີ່ບໍ່ເຊື່ອຟັງພຣະເຈົ້າ; ພວກເຂົາເປັນສິ່ງມີຊີວິດທີ່ບໍ່ສາມາດຖືກຊ່ວຍໃຫ້ລອດພົ້ນໄດ້ ແລະ ໄດ້ຖືກຊາຕານຈັບກຸມຢ່າງສົມບູນ. ຜູ້ຄົນທີ່ກະທຳຄວາມຊົ່ວກໍແມ່ນຄົນເຊັ່ນກັນ; ພວກເຂົາແມ່ນມະນຸດທີ່ຖືກເສື່ອມຊາມຢ່າງຮ້າຍແຮງ ແລະ ເປັນຜູ້ທີ່ບໍ່ສາມາດຊ່ວຍໃຫ້ລອດພົ້ນໄດ້. ຍ້ອນພວກເຂົາເປັນສິ່ງມີຊີວິດ, ຄົນທີ່ກະທຳຄວາມດີກໍຖືກເສື່ອມຊາມເຊັ່ນກັນ ແຕ່ພວກເຂົາແມ່ນຄົນທີ່ເຕັມໃຈແຍກຕົວອອກຈາກອຸປະນິໄສອັນເສື່ອມຊາມຂອງພວກເຂົາ ແລະ ກາຍເປັນຄົນທີ່ສາມາດເຊື່ອຟັງພຣະເຈົ້າ. ຜູ້ຄົນທີ່ກະທຳຄວາມດີບໍ່ໄດ້ເຕັມໄປດ້ວຍຄວາມຊອບທຳ, ກົງກັນຂ້າມພວກເຂົາໄດ້ຮັບຄວາມລອດພົ້ນ ແລະ ປະຖິ້ມອຸປະນິໄສອັນເສື່ອມຊາມຂອງພວກເຂົາ; ພວກເຂົາສາມາດເຊື່ອຟັງພຣະເຈົ້າ. ພວກເຂົາຈະຕັ້ງໝັ້ນໄດ້ໃນທີ່ສຸດ ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ພວກເຂົາບໍ່ເຄີຍຖືກຊາຕານເຮັດໃຫ້ເສື່ອມຊາມຈັກເທື່ອ. ຫຼັງຈາກພາລະກິດ

ຂອງພຣະເຈົ້າສິ້ນສຸດລົງ, ທ່າມກາງສິ່ງທີ່ມີຊີວິດຂອງພຣະອົງຈະມີຜູ້ຄົນຖືກທຳລາຍ ແລະ ຖືກຊ່ວຍໃຫ້ລອດພົ້ນ. ນີ້ແມ່ນກະແສພາລະກິດຄຸ້ມຄອງຂອງພຣະອົງທີ່ບໍ່ສາມາດຫຼີກເວັ້ນໄດ້ ແລະ ບໍ່ມີໃຜສາມາດປະຕິເສດມັນໄດ້. ຄົນກະທຳຄວາມຊົ່ວບໍ່ອະນຸຍາດໃຫ້ຢູ່ລອດ; ຄົນທີ່ເຊື່ອຟັງ ແລະ ຕິດຕາມພຣະອົງຈົນເຖິງທີ່ສຸດກໍ່ຈະຢູ່ລອດຢ່າງແນ່ນອນ. ເນື່ອງຈາກວ່າ ພາລະກິດນີ້ແມ່ນການຄຸ້ມຄອງມະນຸດຊາດ, ດັ່ງນັ້ນຈຶ່ງຈະມີຜູ້ທີ່ລອດພົ້ນ ແລະ ຜູ້ທີ່ຖືກກຳຈັດ. ສິ່ງເຫຼົ່ານີ້ແມ່ນຜົນຕາມມາທີ່ແຕກຕ່າງກັນສຳລັບຜູ້ຄົນປະເພດທີ່ແຕກຕ່າງກັນ ແລະ ນີ້ແມ່ນການຈັດແຈງທີ່ເໝາະສົມທີ່ສຸດສຳລັບສິ່ງມີຊີວິດຂອງພຣະອົງ. ການຈັດແຈງຂັ້ນສຸດທ້າຍຂອງພຣະເຈົ້າຕໍ່ມະນຸດຊາດ ແມ່ນເພື່ອແບ່ງແຍກພວກເຂົາ ໂດຍແບ່ງແຍກຄອບຄົວ, ທຳລາຍເຊື້ອຊາດຕ່າງໆ ແລະ ທຳລາຍເຂດແດນລະຫວ່າງປະເທດໃນການຈັດແຈງໂດຍປາສະຈາກຄອບຄົວ ຫຼື ຊາຍແດນປະເທດ, ເພາະໃນທີ່ສຸດແລ້ວ ມະນຸດແມ່ນມາຈາກບັນພະບຸລຸດດຽວກັນ ແລະ ເປັນສິ່ງຊົງສ້າງຂອງພຣະເຈົ້າ. ສະຫຼຸບແລ້ວ, ສິ່ງມີຊີວິດທັງໝົດທີ່ກະທຳຊົ່ວຈະຖືກທຳລາຍ ແລະ ສິ່ງມີຊີວິດທີ່ເຊື່ອຟັງພຣະເຈົ້າຈະລອດພົ້ນ. ດ້ວຍວິທີນີ້, ຈະບໍ່ມີຄອບຄົວ, ບໍ່ມີປະເທດ ແລະ ໂດຍສະເພາະ ແມ່ນຈະບໍ່ມີເຊື້ອຊາດຕ່າງໆໃນເວລາພັກຜ່ອນທີ່ຈະມາເຖິງ; ມະນຸດຊາດປະເພດນີ້ແມ່ນມະນຸດຊາດທີ່ບໍລິສຸດທີ່ສຸດ. ອາດາມ ແລະ ເອວາໄດ້ຖືກສ້າງຂຶ້ນໃນເບື້ອງຕົ້ນ ເພື່ອໃຫ້ມະນຸດສາມາດເບິ່ງແຍງທຸກສັບພະສິ່ງໃນແຜ່ນດິນໂລກ, ເຊິ່ງໃນເບື້ອງຕົ້ນ ມະນຸດແມ່ນເຈົ້ານາຍຂອງສັບພະສິ່ງທັງປວງ. ຈຸດປະສົງຂອງພຣະເຢໂຮວາໃນການສ້າງມະນຸດແມ່ນເພື່ອອະນຸຍາດໃຫ້ພວກເຂົາມີຊີວິດຢູ່ເທິງແຜ່ນດິນໂລກ ແລະ ເບິ່ງແຍງສັບພະສິ່ງເທິງແຜ່ນດິນໂລກ ຍ້ອນວ່າດັ່ງເດີມແລ້ວ ມະນຸດແມ່ນບໍ່ໄດ້ເສື່ອມຊາມ ແລະ ບໍ່ສາມາດກະທຳສິ່ງທີ່ຊົ່ວຮ້າຍໄດ້. ຢ່າງໃດກໍຕາມ, ຫຼັງຈາກທີ່ມະນຸດໄດ້ເສື່ອມຊາມ, ພວກເຂົາກໍບໍ່ແມ່ນຜູ້ດູແລສັບພະສິ່ງທັງໝົດອີກຕໍ່ໄປ. ຈຸດປະສົງໃນການຊ່ວຍໃຫ້ລອດພົ້ນຂອງພຣະເຈົ້າແມ່ນເພື່ອຟື້ນຟູໜ້າທີ່ດັ່ງກ່າວນີ້ຂອງມະນຸດຊາດ, ເພື່ອຟື້ນຟູເຫດຜົນ ແລະ ການທີ່ເຊື່ອຟັງດັ່ງເດີມຂອງມະນຸດຊາດ; ມະນຸດຊາດຢູ່ໃນຄວາມສະຫງົບແມ່ນການສະແດງເຖິງຜົນສຳເລັດທີ່ພຣະເຈົ້າຫວັງຈະບັນລຸດ້ວຍພາລະກິດການຊ່ວຍໃຫ້ລອດພົ້ນຂອງພຣະອົງ. ເຖິງແມ່ນວ່າມັນຈະບໍ່ເປັນຊີວິດຄືດັ່ງໃນສວນເອເດນອີກຕໍ່ໄປ, ແຕ່ທາດແທ້ຂອງພວກເຂົາກໍຈະຄືເກົ່າ; ມະນຸດຊາດຈະບໍ່ເປັນມະນຸດທີ່ເສື່ອມຊາມຄືດັ່ງທີ່ຜ່ານມາ ແຕ່ກົງກັນຂ້າມ ຈະເປັນມະນຸດທີ່ຖືກເສື່ອມຊາມມາແລ້ວ ແລະ ຕໍ່ມາໄດ້ຮັບການຊ່ວຍໃຫ້ລອດພົ້ນ. ຜູ້ຄົນເຫຼົ່ານີ້ທີ່ໄດ້ຮັບການຊ່ວຍໃຫ້ລອດພົ້ນ (ໝາຍຄວາມວ່າ ຫຼັງຈາກພາລະກິດຂອງພຣະອົງໄດ້ສິ້ນສຸດລົງ) ໃນທີ່ສຸດ ແມ່ນຈະໄດ້ເຂົ້າສູ່ບ່ອນພັກເຊົາ. ເຊັ່ນດຽວກັນ, ຜົນຮັບຂອງຄົນທີ່ຖືກລົງໂທດຈະຖືກເປີດເຜີຍຢ່າງສົມບູນໃນທີ່ສຸດ ແລະ ພວກເຂົາຈະຖືກທຳລາຍເທົ່ານັ້ນຫຼັງຈາກພາລະກິດຂອງພຣະອົງສິ້ນສຸດລົງ. ເວົ້າອີກຢ່າງໜຶ່ງກໍຄື ຫຼັງຈາກພາລະກິດຂອງພຣະອົງສິ້ນສຸດລົງ, ຄົນກະທຳຄວາມຊົ່ວ ແລະ ຄົນທີ່ໄດ້ຮັບການຊ່ວຍໃຫ້ລອດພົ້ນຈະໄດ້ຮັບການເປີດໂປງທັງໝົດເພາະວ່າພາລະກິດຂອງການເປີດໂປງຜູ້ຄົນທຸກປະເພດ (ບໍ່ວ່າພວກເຂົາຈະເປັນຄົນກະທຳຄວາມຊົ່ວ ຫຼື ໃນບັນດາຄົນທີ່ຖືກຊ່ວຍໃຫ້ລອດພົ້ນ) ຈະຖືກປະຕິບັດຕໍ່ທຸກຄົນໄປພ້ອມໆກັນ. ຄົນທີ່ກະທຳຄວາມຊົ່ວຈະຖືກກຳຈັດ ແລະ ຄົນທີ່ອະນຸຍາດໃຫ້ຢູ່ລອດຈະໄດ້ຮັບການເປີດເຜີຍພ້ອມໆກັນ. ດັ່ງນັ້ນ, ຜົນໄດ້

ຮັບຂອງຄົນທຸກປະເພດຈະໄດ້ຮັບການເປີດເຜີຍພ້ອມໆກັນ. ພຣະເຈົ້າຈະບໍ່ອະນຸຍາດໃຫ້ກຸ່ມຄົນທີ່ໄດ້ຮັບການຊ່ວຍໃຫ້ລອດພົ້ນນັ້ນ ເຂົ້າໄປສູ່ບ່ອນພັກເຊົາກ່ອນການແຍກຜູ້ຄົນທີ່ກະທຳຄວາມຊົ່ວນັ້ນອອກ ເພື່ອຕັດສິນ ຫຼື ລົງໂທດພວກເຂົາເທື່ອລະເລັກເທື່ອລະໜ້ອຍ; ນັ້ນຈະບໍ່ສອດຄ່ອງກັບຄວາມເປັນຈິງ. ເມື່ອຄົນທີ່ກະທຳຄວາມຊົ່ວຖືກທຳລາຍ ແລະ ຄົນທີ່ສາມາດລອດພົ້ນໄດ້ເຂົ້າໄປສູ່ບ່ອນພັກເຊົາ, ພາລະກິດຂອງພຣະອົງທົ່ວຈັກກະວານກໍຈະສຳເລັດລົງ. ຈະບໍ່ມີການຍົກລຳດັບຄວາມສຳຄັນລະຫວ່າງຄົນທີ່ໄດ້ຮັບພອນ ແລະ ຄົນທີ່ໄດ້ຮັບຄວາມໂຊກຮ້າຍ; ຄົນທີ່ໄດ້ຮັບພອນຈະດຳລົງຊີວິດຢ່າງນິລັນດອນ ແລະ ຄົນທີ່ທົນທຸກທໍລະມານກັບຄວາມໂຊກຮ້າຍຈະພິນາດໄປຊົ່ວນິລັນດອນ. ທັງສອງຂັ້ນຕອນຂອງພາລະກິດເຫຼົ່ານີ້ຈະສຳເລັດລົງພ້ອມໆກັນ ມັນເປັນຍ້ອນວ່າ ຍັງມີຄົນທີ່ບໍ່ເຊື່ອຟັງ ຄວາມຊອບທຳຂອງຄົນທີ່ເຊື່ອຟັງຈຶ່ງຈະຖືກເປີດເຜີຍ ແລະ ເນື່ອງຈາກວ່າ ຍັງມີຄົນທີ່ໄດ້ຮັບພອນ ຄວາມໂຊກຮ້າຍທີ່ທົນທຸກໂດຍຜູ້ກະທຳຄວາມຊົ່ວສຳລັບການປະພຶດຊົ່ວຂອງພວກເຂົາກໍຈະຖືກເປີດເຜີຍ. ຖ້າພຣະເຈົ້າບໍ່ເປີດໂປງຄົນກະທຳຄວາມຊົ່ວ, ແລ້ວ ຜູ້ຄົນທີ່ເຊື່ອຟັງພຣະເຈົ້າຢ່າງຈິງໃຈກໍຈະບໍ່ມີວັນເຫັນຕາເວັນໄດ້; ຖ້າພຣະເຈົ້າບໍ່ເອົາຄົນທີ່ເຊື່ອຟັງພຣະອົງໄປສູ່ຈຸດໝາຍປາຍທາງທີ່ເໝາະສົມ, ແລ້ວຜູ້ຄົນທີ່ບໍ່ເຊື່ອຟັງນັ້ນພຣະເຈົ້າກໍຈະບໍ່ສາມາດໄດ້ຮັບການລົງໂທດຂອງພວກເຂົາຢ່າງສົມຄວນ. ສິ່ງນີ້ແມ່ນຂະບວນການຂອງພາລະກິດຂອງພຣະອົງ. ຖ້າພຣະອົງບໍ່ດຳເນີນພາລະກິດແຫ່ງການລົງໂທດຄົນຊົ່ວ ແລະ ໃຫ້ລາງວັນແກ່ຄົນດີ, ແລ້ວສິ່ງທີ່ມີຊີວິດຂອງພຣະອົງກໍຈະບໍ່ມີວັນສາມາດເຂົ້າສູ່ຈຸດໝາຍປາຍທາງຂອງພວກເຂົາເອງໄດ້. ເມື່ອມະນຸດຊາດໄດ້ເຂົ້າສູ່ບ່ອນພັກເຊົາ, ຄົນກະທຳຄວາມຊົ່ວກໍຈະຖືກທຳລາຍ, ມະນຸດຊາດທັງໝົດຈະເຂົ້າໄປສູ່ເສັ້ນທາງທີ່ຖືກຕ້ອງ; ຄົນທຸກປະເພດຈະຢູ່ກັບປະເພດຂອງຕົນເອງຕາມໜ້າທີ່ທີ່ພວກເຂົາຄວນປະຕິບັດ. ມີພຽງວິທີນີ້ຈຶ່ງຈະມີວັນແຫ່ງການພັກເຊົາຂອງມະນຸດຊາດ, ມັນຈະເປັນແນວທາງທີ່ບໍ່ສາມາດຫຼີກເວັ້ນໄດ້ໃນການພັດທະນາຂອງມະນຸດ ແລະ ເມື່ອມະນຸດຊາດໄດ້ເຂົ້າສູ່ບ່ອນພັກເຊົາເທົ່ານັ້ນ ຜົນສຳເລັດອັນຍິ່ງໃຫຍ່ ແລະ ຄັ້ງສຸດທ້າຍຂອງພຣະເຈົ້າຈຶ່ງຈະບັນລຸຜົນ; ນີ້ຈະເປັນພາກສ່ວນສຸດທ້າຍຂອງພາລະກິດຂອງພຣະອົງ. ພາລະກິດນີ້ຈະສິ້ນສຸດຊີວິດຝ່າຍຮ່າງກາຍທີ່ເສື່ອມໂຊມຂອງມະນຸດຊາດທັງໝົດ ພ້ອມທັງຊີວິດຂອງມະນຸດຊາດທີ່ເສື່ອມຊາມທັງໝົດ. ຈາກຈຸດນີ້ມະນຸດຈະເຂົ້າສູ່ໂລກໃໝ່. ເຖິງແມ່ນວ່າ ມະນຸດທຸກຄົນອາໄສຢູ່ໃນເນື້ອໜັງ, ມັນຈະມີຄວາມແຕກຕ່າງທີ່ສຳຄັນລະຫວ່າງທາດແທ້ຂອງຊີວິດນີ້ ແລະ ທາດແທ້ຂອງຊີວິດມະນຸດຊາດທີ່ເສື່ອມຊາມ. ຄວາມໝາຍຂອງການມີຊີວິດນີ້ ແລະ ຄວາມໝາຍຂອງການມີຊີວິດທີ່ເສື່ອມຊາມກໍແຕກຕ່າງເຊັ່ນກັນ. ເຖິງແມ່ນວ່າ ນີ້ບໍ່ແມ່ນຊີວິດຂອງຄົນປະເພດໃໝ່, ແຕ່ສາມາດເວົ້າໄດ້ວ່າ ເປັນຊີວິດຂອງມະນຸດຊາດທີ່ໄດ້ຮັບການຊ່ວຍໃຫ້ລອດພົ້ນ ພ້ອມທັງເປັນຊີວິດທີ່ໄດ້ຮັບຄວາມເປັນມະນຸດ ແລະ ເຫດຜົນອີກຄັ້ງ. ຄົນເຫຼົ່ານີ້ແມ່ນຄົນທີ່ບໍ່ເຊື່ອຟັງພຣະເຈົ້າມາກ່ອນ, ຜູ້ທີ່ພຣະເຈົ້າໄດ້ເອົາຊະນະ ແລະ ຫຼັງຈາກນັ້ນກໍໄດ້ຮັບການຊ່ວຍໃຫ້ລອດພົ້ນໂດຍພຣະອົງ; ຄົນເຫຼົ່ານີ້ແມ່ນຄົນທີ່ເຮັດໃຫ້ພຣະອົງເສຍກຽດ ແລະ ຕໍ່ມາໄດ້ເປັນພະຍານໃຫ້ກັບພຣະອົງ. ຫຼັງຈາກທີ່ພວກເຂົາໄດ້ຜ່ານ ແລະ ລອດພົ້ນຈາກການທົດສອບຂອງພຣະອົງ, ການດຳລົງຢູ່ຂອງພວກເຂົາຈະເປັນການດຳລົງຢູ່ທີ່ມີຄວາມໝາຍຫຼາຍທີ່ສຸດ; ພວກເຂົາຄືຄົນ

ທີ່ເປັນພະຍານໃຫ້ພຣະເຈົ້າຕໍ່ໜ້າຊາຕານ ແລະ ເປັນມະນຸດທີ່ເໝາະສົມທີ່ຈະດຳລົງຢູ່. ຄົນທີ່ຈະຖືກທຳລາຍແມ່ນຄົນທີ່ບໍ່ສາມາດເປັນພະຍານໃຫ້ກັບພຣະເຈົ້າ ແລະ ບໍ່ເໝາະສົມທີ່ຈະມີຊີວິດຢູ່. ພວກເຂົາຈະຖືກທຳລາຍຍ້ອນການປະພຶດຊົ່ວຂອງພວກເຂົາ ແລະ ການທຳລາຍລ້າງດັ່ງກ່າວກໍຄືຈຸດໝາຍປາຍທາງທີ່ດີທີ່ສຸດສຳລັບພວກເຂົາ. ໃນອະນາຄົດ ເມື່ອມະນຸດເຂົ້າສູ່ໂລກທີ່ສວຍງາມ, ຈະບໍ່ມີຄວາມສຳພັນລະຫວ່າງຜົວ ແລະ ເມຍ, ລະຫວ່າງ ພໍ່ ແລະ ລູກສາວ ຫຼື ລະຫວ່າງ ແມ່ ແລະ ລູກຊາຍ ທີ່ມະນຸດຈິນຕະນາການວ່າ ພວກເຂົາຈະໄດ້ພົບເຫັນ. ໃນເວລານັ້ນ, ມະນຸດແຕ່ລະຄົນຈະປະຕິບັດຕາມປະເພດຂອງພວກເຂົາເອງ ແລະ ຄອບຄົວຕ່າງໆກໍຈະຖືກມ້າງເພໄປແລ້ວ. ເມື່ອໄດ້ລົ້ມເຫຼວຢ່າງສິ້ນເຊີງແບບນີ້, ຊາຕານຈະບໍ່ມີວັນລົບກວນມະນຸດອີກຕໍ່ໄປ ແລະ ມະນຸດກໍຈະບໍ່ມີອຸປະນິໄສທີ່ເສື່ອມຊາມຄືກັບຊາຕານອີກຕໍ່ໄປ. ຜູ້ຄົນທີ່ບໍ່ເຊື່ອຟັງຈະຖືກທຳລາຍໄປໝົດແລ້ວ ແລະ ຈະມີແຕ່ຜູ້ຄົນທີ່ເຊື່ອຟັງເທົ່ານັ້ນຢູ່ລອດ. ດັ່ງນັ້ນ, ຈະມີຄອບຄົວພຽງຈຳນວນເລັກນ້ອຍທີ່ຢູ່ລອດ; ແລ້ວຄວາມສຳພັນທາງດ້ານຮ່າງກາຍຈະສາມາດຄົງຢູ່ໄດ້ແນວໃດ? ຊີວິດຜ່ານມາຂອງມະນຸດທາງຝ່າຍເນື້ອໜັງຈະຖືກເກືອດຫ້າມທັງໝົດ; ແລ້ວການສຳພັນທາງດ້ານຮ່າງກາຍຈະສາມາດຄົງຢູ່ລະຫວ່າງຜູ້ຄົນໄດ້ແນວໃດ? ເຊິ່ງປາສະຈາກອຸປະນິໄສທີ່ເສື່ອມຊາມຂອງຊາຕານ, ຊີວິດຂອງມະນຸດຈະບໍ່ເປັນຊີວິດແບບເກົ່າຄືໃນອະດີດອີກຕໍ່ໄປ, ແຕ່ກົງກັນຂ້າມ ຈະເປັນຊີວິດໃໝ່. ພໍ່ແມ່ຈະສູນເສຍລູກໆ ແລະ ລູກໆຈະສູນເສຍພໍ່ແມ່. ສາມີຈະສູນເສຍພັນລະຍາ ແລະ ພັນລະຍາຈະສູນເສຍສາມີ. ໃນປັດຈຸບັນຍັງມີຄວາມສຳພັນທາງດ້ານຮ່າງກາຍລະຫວ່າງຜູ້ຄົນ, ແຕ່ເມື່ອພວກເຂົາທັງໝົດໄດ້ເຂົ້າສູ່ບ່ອນພັກເຊົາ ກໍຈະບໍ່ມີຄວາມສຳພັນນັ້ນອີກຕໍ່ໄປ. ມີພຽງມະນຸດຊາດປະເພດດັ່ງກ່າວເທົ່ານັ້ນທີ່ຈະມີຄວາມຊອບທຳ ແລະ ຄວາມບໍລິສຸດ; ມີພຽງມະນຸດຊາດປະເພດດັ່ງກ່າວເທົ່ານັ້ນສາມາດນະມັດສະການພຣະເຈົ້າ.

ພຣະເຈົ້າສ້າງມະນຸດ ແລະ ວາງພວກເຂົາໄວ້ເທິງແຜ່ນດິນໂລກ ແລະ ພຣະອົງໄດ້ນຳພາພວກເຂົາຈົນມາເຖິງປັດຈຸບັນ. ຫຼັງຈາກນັ້ນ ພຣະອົງຊ່ວຍພວກເຂົາໃຫ້ລອດພົ້ນ ແລະ ເຮັດໜ້າທີ່ເປັນຜູ້ຖວາຍບາບເພື່ອມະນຸດຊາດ. ສຸດທ້າຍ ພຣະອົງຍັງຕ້ອງໄດ້ເອົາຊະນະມະນຸດຊາດ, ຊ່ວຍມະນຸດໃຫ້ລອດທັງໝົດ ແລະ ຟື້ນຟູພວກເຂົາໃຫ້ກັບຄືນສູ່ລັກສະນະດັ່ງເດີມຂອງພວກເຂົາ. ນີ້ແມ່ນພາລະກິດທີ່ພຣະອົງໄດ້ປະຕິບັດຕັ້ງແຕ່ຕົ້ນ ເຊິ່ງນັ້ນກໍຄືການຟື້ນຟູມະນຸດຊາດໃຫ້ກັບຄືນສູ່ພາບດັ່ງເດີມ ແລະລັກສະນະດັ່ງເດີມຂອງພວກເຂົາ. ພຣະອົງຈະສ້າງຕັ້ງອານາຈັກຂອງພຣະອົງ ແລະ ຟື້ນຟູລັກສະນະດັ່ງເດີມຂອງມະນຸດ ເຊິ່ງໝາຍຄວາມວ່າ ພຣະເຈົ້າຈະຟື້ນຟູສິດອຳນາດຂອງພຣະອົງຢູ່ເທິງແຜ່ນດິນໂລກ ແລະ ທ່າມກາງການສ້າງທັງປວງ. ຫຼັງຈາກຖືກຊາຕານເຮັດໃຫ້ເສື່ອມຊາມ, ມະນຸດຊາດກໍສູນເສຍຫົວໃຈທີ່ຢຳເກງພຣະເຈົ້າ ພ້ອມທັງໜ້າທີ່ທີ່ສິ່ງມີຊີວິດຂອງພຣະເຈົ້າຄວນມີ, ດ້ວຍເຫດນັ້ນ ຈຶ່ງກາຍເປັນສັດຕູທີ່ບໍ່ເຊື່ອຟັງພຣະເຈົ້າ. ຕໍ່ມາ ມະນຸດຊາດດຳລົງຊີວິດຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ແລະ ປະຕິບັດຕາມຄຳສັ່ງຂອງຊາຕານ; ສະນັ້ນ ພຣະເຈົ້າຈຶ່ງບໍ່ມີຫົນທາງທີ່ຈະປະຕິບັດພາລະກິດໃນທ່າມກາງສິ່ງມີຊີວິດຂອງພຣະອົງ ແລະ ຍິ່ງບໍ່ສາມາດເອົາຊະນະຄວາມເຄົາລົບຢຳເກງຂອງພວກເຂົາໄດ້. ມະນຸດຖືກສ້າງໂດຍພຣະເຈົ້າ ແລະ ຄວນນະມັດສະການພຣະເຈົ້າ ແຕ່ຄວາມຈິງແລ້ວ ພວກເຂົາຫັນຫຼັງ

ໃສ່ພຣະອົງ ແລະ ບູຊາຊາຕານແທນ. ຊາຕານກາຍເປັນມິ່ງຂວັນໃນຫົວໃຈຂອງພວກເຂົາ. ດ້ວຍເຫດນີ້ ພຣະເຈົ້າຈຶ່ງສູນເສຍຕໍາແໜ່ງຂອງພຣະອົງໃນຫົວໃຈຂອງມະນຸດ ເຊິ່ງເວົ້າໄດ້ວ່າ ພຣະອົງເສຍຄວາມໝາຍຢູ່ເບື້ອງຫຼັງໃນການສ້າງມະນຸດຊາດຂອງພຣະອົງ. ສະນັ້ນ ເພື່ອຟື້ນຟູຄວາມໝາຍຢູ່ເບື້ອງຫຼັງໃນການສ້າງມະນຸດຊາດຂອງພຣະອົງ, ພຣະອົງຕ້ອງຟື້ນຟູລັກສະນະດັ່ງເດີມຂອງພວກເຂົາ ແລະ ກໍາຈັດມະນຸດຊາດອອກຈາກອຸປະນິໄສອັນເສື່ອມຊາມຂອງພວກເຂົາ. ເພື່ອເອົາມະນຸດຄືນມາຈາກຊາຕານ, ພຣະອົງຕ້ອງຊ່ວຍມະນຸດໃຫ້ລອດພົ້ນຈາກຄວາມຜິດບາບ. ມີພຽງວິທີນີ້ເທົ່ານັ້ນ ພຣະເຈົ້າຈຶ່ງສາມາດຄ່ອຍໆຟື້ນຟູລັກສະນະ ແລະ ໜ້າທີ່ດັ່ງເດີມຂອງມະນຸດ ແລະ ສຸດທ້າຍ ກໍຟື້ນຟູອານາຈັກຂອງພຣະອົງ. ການທໍາລາຍບຸດຊາຍທີ່ບໍ່ເຊື່ອຟັງເຫຼົ່ານັ້ນເປັນຄັ້ງສຸດທ້າຍກໍຍັງຈະຖືກດໍາເນີນຕໍ່ໄປເພື່ອເຮັດໃຫ້ມະນຸດນະມັດສະການພຣະເຈົ້າດີຂຶ້ນ ແລະ ມີຊີວິດຢູ່ເທິງແຜ່ນດິນໂລກດີຂຶ້ນ. ຍ້ອນພຣະເຈົ້າສ້າງມະນຸດ, ພຣະອົງກໍຕ້ອງເຮັດໃຫ້ມະນຸດນະມັດສະການພຣະອົງ; ຍ້ອນພຣະອົງປາຖະໜາຟື້ນຟູໜ້າທີ່ດັ່ງເດີມຂອງມະນຸດຊາດ, ພຣະອົງຈະຕ້ອງຟື້ນຟູສິ່ງນັ້ນທັງໝົດ ແລະ ປາສະຈາກການເຈືອປົນໃດໆ. ການຟື້ນຟູສິດອໍານາດຂອງພຣະອົງໝາຍເຖິງການເຮັດໃຫ້ມະນຸດນະມັດສະການພຣະອົງ ແລະ ເຊື່ອຟັງພຣະອົງ; ໝາຍຄວາມວ່າ ພຣະອົງຈະຕ້ອງເຮັດໃຫ້ມະນຸດດໍາລົງຊີວິດຍ້ອນພຣະອົງ ແລະ ເຮັດໃຫ້ສັດຕູຂອງພຣະອົງດັບສູນຍ້ອນສິດອໍານາດຂອງພຣະອົງ; ໝາຍຄວາມວ່າ ພຣະອົງຈະເຮັດໃຫ້ທຸກສິ່ງກ່ຽວກັບພຣະອົງໝັ້ນຄົງໃນທ່າມກາງມະນຸດຊາດ ໂດຍປາສະຈາກການຕໍ່ຕ້ານຈາກບຸກຄົນໃດໆ. ອານາຈັກທີ່ພຣະອົງປາດຖະໜາທີ່ຈະສ້າງຕັ້ງຄືອານາຈັກຂອງພຣະອົງເອງ. ມະນຸດຊາດທີ່ພຣະອົງປາດຖະໜາແມ່ນຜູ້ທີ່ຈະນະມັດສະການພຣະອົງ, ຜູ້ທີ່ຈະເຊື່ອຟັງພຣະອົງທັງໝົດ ແລະ ສະແດງເຖິງຄວາມສະຫງ່າລາສີຂອງພຣະອົງ. ຖ້າພຣະອົງບໍ່ຊ່ວຍມະນຸດທີ່ເສື່ອມຊາມໃຫ້ລອດພົ້ນ, ແລ້ວຄວາມໝາຍທີ່ຢູ່ເບື້ອງຫຼັງໃນການສ້າງມະນຸດຊາດຂອງພຣະອົງກໍຈະສູນຫາຍໄປ; ພຣະອົງຈະບໍ່ມີສິດອໍານາດໃນທ່າມກາງມະນຸດອີກຕໍ່ໄປ ແລະ ອານາຈັກຂອງພຣະອົງຈະບໍ່ສາມາດມີຢູ່ເທິງແຜ່ນດິນໂລກອີກຕໍ່ໄປ. ຖ້າພຣະອົງບໍ່ທໍາລາຍສັດຕູຜູ້ທີ່ບໍ່ເຊື່ອຟັງພຣະອົງເຫຼົ່ານັ້ນ, ເຊິ່ງພຣະອົງກໍຈະບໍ່ສາມາດຮັບເອົາຄວາມສະຫງ່າລາສີຂອງພຣະອົງທັງໝົດ ຫຼື ພຣະອົງຈະບໍ່ສາມາດສ້າງຕັ້ງອານາຈັກຂອງພຣະອົງຢູ່ເທິງແຜ່ນດິນໂລກໄດ້. ສິ່ງເຫຼົ່ານີ້ຈະເປັນສັນຍາລັກແຫ່ງຄວາມສໍາເລັດຂອງພາລະກິດຂອງພຣະອົງ ແລະ ຜົນສໍາເລັດທີ່ຍິ່ງໃຫຍ່ຂອງພຣະອົງ: ເພື່ອທໍາລາຍໃຫ້ໝົດສໍາລັບຜູ້ທີ່ຢູ່ໃນທ່າມກາງມະນຸດທີ່ບໍ່ເຊື່ອຟັງພຣະອົງ ແລະ ເພື່ອນໍາເອົາຜູ້ທີ່ຖືກເຮັດໃຫ້ສົມບູນເຂົ້າສູ່ບ່ອນພັກເຊົາ. ເມື່ອມະນຸດໄດ້ຖືກຟື້ນຟູສູ່ລັກສະນະດັ່ງເດີມ ແລະ ເມື່ອພວກເຂົາສາມາດບັນລຸຜົນຕາມໜ້າທີ່ຂອງພວກເຂົາເອງ, ສາມາດຮັກສາຕໍາແໜ່ງຂອງພວກເຂົາເອງຢ່າງເໝາະສົມ ແລະ ເຊື່ອຟັງການຈັດແຈງທັງໝົດຂອງພຣະເຈົ້າ, ພຣະເຈົ້າຈະຮັບເອົາກຸ່ມຄົນທີ່ນະມັດສະການພຣະອົງຢູ່ເທິງແຜ່ນດິນໂລກ ແລະ ພຣະອົງຍັງຈະໄດ້ສ້າງຕັ້ງອານາຈັກເທິງແຜ່ນດິນໂລກທີ່ນະມັດສະການພຣະອົງ. ພຣະອົງຈະຮັບໄຊຊະນະຢູ່ເທິງແຜ່ນດິນໂລກໂດຍນິລັນດອນ ແລະ ຜູ້ທີ່ຕໍ່ຕ້ານພຣະອົງຈະຖືກທໍາລາຍລົງຢ່າງນິລັນດອນ. ນີ້ຈະເປັນການຟື້ນຟູເຈດຕະນາດັ່ງເດີມຂອງພຣະອົງໃນການສ້າງມະນຸດຊາດ; ມັນຈະເປັນການຟື້ນຟູເຈດຕະນາໃນການສ້າງສັບພະສິ່ງທັງປວງ ແລະ ມັນຍັງຈະຟື້ນຟູສິດອໍານາດຂອງ

ພຣະອົງຢູ່ເທິງແຜ່ນດິນໂລກ ນັ້ນກໍຄື ທ່າມກາງສັບພະທຸກສິ່ງ ແລະ ທ່າມກາງສັດຕູຂອງພຣະອົງ. ສິ່ງເຫຼົ່ານີ້ຈະເປັນສັນຍາລັກແຫ່ງໄຊຊະນະທັງໝົດຂອງພຣະອົງ. ຕໍ່ຈາກນີ້ໄປ ມະນຸດຊາດຈະເຂົ້າສູ່ບ່ອນພັກເຊົາ ແລະ ເລີ່ມຕົ້ນຊີວິດບົນເສັ້ນທາງທີ່ຖືກຕ້ອງ. ພຣະເຈົ້າຈະເຂົ້າສູ່ບ່ອນພັກເຊົາຢ່າງນິລັນດອນກັບມະນຸດຊາດເຊັ່ນກັນ ແລະ ເລີ່ມຕົ້ນຊີວິດຢ່າງນິດນິລັນຮ່ວມກັນ ລະຫວ່າງ ພຣະອົງເອງ ແລະ ມະນຸດ. ຄົນສົກກະປົກ ແລະ ຄົນບໍ່ເຊື່ອຟັງເທິງແຜ່ນດິນໂລກຈະສູນຫາຍໄປ ແລະ ຜູ້ທີ່ຮ້ອງໄຫ້ເສຍໃຈຈະຖືກດັບສູນ ແລະ ທຸກສິ່ງໃນໂລກນີ້ທີ່ຕໍ່ຕ້ານພຣະເຈົ້າຈະບໍ່ມີຢູ່ອີກຕໍ່ໄປ. ມີແຕ່ພຣະເຈົ້າ ແລະ ຜູ້ຄົນທີ່ພຣະອົງຊ່ວຍໃຫ້ລອດເທົ່ານັ້ນທີ່ຈະຍັງຢູ່; ມີແຕ່ການຊົງສ້າງຂອງພຣະອົງເທົ່ານັ້ນທີ່ຈະຍັງຢູ່.

# ພຣະທຳຂອງພຣະຄຣິດໃນຂະນະ ທີ່ພຣະອົງຊົງຍ່າງໃນຄຣິສຕະຈັກ

# IV

(1994 ຫາ ວັນທີ 23 ມີນາ 2010)

# ເວລາທີ່ເຈົ້າເຫັນຮ່າງກາຍຝ່າຍວິນຍານຂອງພຣະເຢຊູ, ພຣະເຈົ້າແມ່ນໄດ້ສ້າງສະຫວັນ ແລະ ແຜ່ນດິນໂລກຂຶ້ນໃໝ່ແລ້ວ

ເຈົ້າຕ້ອງການເຫັນພຣະເຢຊູບໍ່? ເຈົ້າຕ້ອງການດຳລົງຊີວິດຮ່ວມກັບພຣະເຢຊູບໍ່? ເຈົ້າຕ້ອງການໄດ້ຍິນພຣະທຳທີ່ພຣະເຢຊູກ່າວບໍ່? ຖ້າຕ້ອງການ ແລ້ວເຈົ້າຈະຕ້ອນຮັບການກັບມາຂອງພຣະເຢຊູໄດ້ແນວໃດ? ເຈົ້າກຽມພ້ອມຢ່າງຄົບຖ້ວນແລ້ວບໍ່? ເຈົ້າຈະຕ້ອນຮັບການກັບມາຂອງພຣະເຢຊູໃນລັກສະນະໃດ? ເຮົາຄິດວ່າ ອ້າຍເອື້ອຍນ້ອງທຸກຄົນທີ່ເດີນຕາມພຣະເຢຊູຈະໃຫ້ການຕ້ອນຮັບພຣະອົງຢ່າງດີ. ແຕ່ພວກເຈົ້າເຄີຍພິຈາລະນາເລື່ອງນີ້ບໍ່: ເມື່ອພຣະອົງກັບມາ ພວກເຈົ້າຈະຮູ້ຈັກພຣະເຢຊູຢ່າງແທ້ຈິງບໍ່? ພວກເຈົ້າຈະເຂົ້າໃຈທຸກສິ່ງທີ່ພຣະອົງກ່າວຢ່າງແທ້ຈິງບໍ່? ເຈົ້າຈະຍອມຮັບພາລະກິດທັງໝົດທີ່ພຣະອົງປະຕິບັດໂດຍບໍ່ມີເງື່ອນໄຂຢ່າງແທ້ຈິງບໍ່? ຄົນເຫຼົ່ານັ້ນທຸກຄົນທີ່ໄດ້ອ່ານພຣະຄຳພີຮູ້ຈັກເຖິງການກັບມາຂອງພຣະເຢຊູ ແລະ ຄົນເຫຼົ່ານັ້ນທຸກຄົນທີ່ອ່ານພຣະຄຳພີຢ່າງຕັ້ງອົກຕັ້ງໃຈກໍລໍຖ້າການມາຂອງພຣະອົງ. ພວກເຈົ້າຕັ້ງໃຈໃສ່ໃນການມາເຖິງຂອງຊ່ວງເວລານັ້ນ ແລະ ຄວາມສັດຊື່ຂອງພວກເຈົ້າເປັນຕາສັນລະເສີນ, ຄວາມເຊື່ອຂອງພວກເຈົ້າເປັນຕາອິດສາແທ້ໆ, ແຕ່ເຈົ້າຮູ້ບໍ່ວ່າ ພວກເຈົ້າໄດ້ເຮັດຜິດພາດຢ່າງຮ້າຍແຮງ? ພຣະເຢຊູຈະກັບມາໃນລັກສະນະໃດ? ພວກເຈົ້າເຊື່ອວ່າ ພຣະເຢຊູຈະກັບມາເທິງເມກສີຂາວ ແຕ່ເຮົາຖາມເຈົ້າວ່າ: ເມກສີຂາວນີ້ໝາຍເຖິງຫຍັງ? ມີຜູ້ຕິດຕາມພຣະເຢຊູຫຼາຍຄົນທີ່ກຳລັງລໍຖ້າການກັບມາຂອງພຣະອົງ, ພຣະອົງຈະລົງມາທ່າມກາງຄົນກຸ່ມໃດ? ຖ້າພວກເຈົ້າແມ່ນກຸ່ມທຳອິດທີ່ພຣະເຢຊູຈະລົງມາຫາ ຄົນອື່ນຈະບໍ່ເບິ່ງສິ່ງນີ້ເປັນສິ່ງທີ່ບໍ່ຍຸຕິທຳຢ່າງແຮງບໍ່? ເຮົາຮູ້ວ່າ ພວກເຈົ້າມີຄວາມຈິງໃຈ ແລະ ຄວາມສັດຊື່ທີ່ຍິ່ງໃຫຍ່ໃຫ້ກັບພຣະເຢຊູ ແຕ່ພວກເຈົ້າເຄີຍພົບພຣະເຢຊູບໍ່? ພວກເຈົ້າຮູ້ຈັກຈິດໃຈຂອງພຣະອົງບໍ່? ພວກເຈົ້າເຄີຍດຳລົງຊີວິດຮ່ວມກັບພຣະອົງບໍ່? ພວກເຈົ້າຮູ້ຈັກພຣະອົງແທ້ໆຫຼາຍສ່ຳໃດ? ບາງຄົນຈະເວົ້າວ່າ ຄຳເວົ້າເຫຼົ່ານີ້ເຮັດໃຫ້ພວກເຂົາຕົກຢູ່ໃນສະຖານະການລຳບາກທີ່ຕອບຍາກ. ພວກເຂົາຈະເວົ້າວ່າ "ຂ້ານ້ອຍໄດ້ອ່ານພຣະຄຳພີຕັ້ງແຕ່ຕົ້ນຈົນຈົບເປັນເວລາຫຼາຍຄັ້ງ. ຂ້ານ້ອຍຈະບໍ່ຮູ້ຈັກພຣະເຢຊູໄດ້ແນວໃດ? ບໍ່ແມ່ນພຽງແຕ່ຈິດໃຈຂອງພຣະເຢຊູ, ຂ້ານ້ອຍຮູ້ຈັກແມ່ນແຕ່ສີຂອງເສື້ອຜ້າທີ່ພຣະອົງມັກນຸ່ງ. ພຣະອົງບໍ່ໄດ້ດູຖູກຂ້ານ້ອຍບໍ ເມື່ອພຣະອົງເວົ້າວ່າຂ້ານ້ອຍບໍ່ເຂົ້າໃຈພຣະອົງ?" ເຮົາແນະນຳໃຫ້ເຈົ້າບໍ່ໂຕ້ຖຽງບັນຫາເຫຼົ່ານີ້; ໃຈເຢັນໄວ້ກ່ອນຈະດີກວ່າ ແລະ ຈິ່ງມາສົນທະນາກັນກ່ຽວກັບຄຳຖາມດັ່ງຕໍ່ໄປນີ້: ໜຶ່ງ, ເຈົ້າຮູ້ຈັກບໍ່ວ່າ ແມ່ນຫຍັງຄືຄວາມເປັນຈິງ ແລະ ແມ່ນຫຍັງຄືທິດສະດີ? ສອງ, ເຈົ້າຮູ້ຈັກບໍ່ວ່າ ແນວຄິດແມ່ນຫຍັງ ແລະ ຄວາມຈິງແມ່ນຫຍັງ? ສາມ, ເຈົ້າຮູ້ຈັກບໍ່ວ່າ ແມ່ນຫຍັງຄືສິ່ງທີ່ຈິນຕະນາການ ແລະ ແມ່ນຫຍັງຄືສິ່ງທີ່ເປັນຈິງ?

ບາງຄົນປະຕິເສດຄວາມຈິງທີ່ບອກວ່າ ພວກເຂົາບໍ່ເຂົ້າໃຈພຣະເຢຊູ. ແຕ່ເຮົາເວົ້າວ່າ ພວກເຈົ້າບໍ່ເຂົ້າໃຈພຣະອົງແມ່ນແຕ່ສິ່ງທີ່ເລັກນ້ອຍທີ່ສຸດ ແລະ ບໍ່ເຂົ້າໃຈຂໍ້ພຣະທຳແມ່ນແຕ່ຂໍ້ດຽວຂອງພຣະເຢຊູ. ນີ້ເປັນຍ້ອນວ່າ ພວກເຈົ້າແຕ່ລະຄົນຕິດຕາມພຣະອົງ ຍ້ອນພຣະຄຳພີ ແລະ ຍ້ອນສິ່ງທີ່ຄົນອື່ນເວົ້າ.

ພວກເຈົ້າບໍ່ເຄີຍເຫັນພຣະເຢຊູ ຢ່າວ່າແຕ່ດຳລົງຊີວິດຮ່ວມກັບພຣະອົງເລີຍ ແລະ ພວກເຈົ້າບໍ່ເຄີຍແມ່ນແຕ່ຢູ່ຮ່ວມກັບພຣະອົງໃນເວລາໄລຍະສັ້ນ. ເມື່ອເປັນດັ່ງນັ້ນ ສິ່ງທີ່ພວກເຈົ້າເຂົ້າໃຈກ່ຽວກັບພຣະເຢຊູບໍ່ມີຫຍັງເລີຍ ແຕ່ເປັນພຽງທິດສະດີບໍ່ແມ່ນບໍ? ບໍ່ແມ່ນມັນປາສະຈາກຄວາມເປັນຈິງບໍ? ບາງເທື່ອບາງຄົນເຄີຍເຫັນພາບວາດຂອງພຣະເຢຊູ ຫຼື ບາງຄົນເຄີຍຢ້ຽມຢາມເຮືອນຂອງພຣະເຢຊູເປັນການສ່ວນຕົວ. ບາງເທື່ອ ບາງຄົນໄດ້ຈັບຕ້ອງເສື້ອຜ້າຂອງພຣະເຢຊູ, ແຕ່ ເຖິງວ່າເຈົ້າຈະໄດ້ຊີມອາຫານທີ່ພຣະເຢຊູໄດ້ຮັບປະທານເປັນການສ່ວນຕົວກໍຕາມ, ສິ່ງທີ່ເຈົ້າເຂົ້າໃຈກ່ຽວກັບພຣະອົງກໍຍັງເປັນພຽງທິດສະດີ ແລະ ບໍ່ແມ່ນຄວາມເປັນຈິງ. ບໍ່ວ່າຈະເປັນກໍລະນີໃດກໍຕາມ ເຈົ້າບໍ່ເຄີຍເຫັນພຣະເຢຊູ ແລະ ຢູ່ຮ່ວມກັບພຣະອົງໃນເວລາທີ່ພຣະອົງຢູ່ໃນຮ່າງຂອງມະນຸດ ແລະ ດ້ວຍເຫດນັ້ນ ສິ່ງທີ່ເຈົ້າເຂົ້າໃຈກ່ຽວກັບພຣະເຢຊູກໍຈະເປັນທິດສະດີວ່າງເປົ່າສະເໝີ ເຊິ່ງປາສະຈາກຄວາມເປັນຈິງ. ບາງເທື່ອ ຄຳເວົ້າຂອງເຮົາເຮັດໃຫ້ເຈົ້າສົນໃຈພຽງແຕ່ເລັກນ້ອຍ ແຕ່ເຮົາຖາມເຈົ້າສິ່ງນີ້: ເຖິງເຈົ້າອາດໄດ້ອ່ານໜັງສືຫຼາຍເຫຼັ້ມທີ່ຂຽນໂດຍນັກປະພັນທີ່ເຈົ້າເຄົາລົບທີ່ສຸດ ເຈົ້າສາມາດເຂົ້າໃຈລາວຢ່າງເຕັມທີ່ ໂດຍບໍ່ຕ້ອງໃຊ້ເວລາຢູ່ກັບລາວບໍ່? ເຈົ້າຮູ້ບໍ່ວ່າ ບຸກຄະລິກຂອງລາວເປັນແນວໃດ? ເຈົ້າຮູ້ບໍ່ວ່າ ລາວມີຊີວິດແບບໃດ? ເຈົ້າຮູ້ກ່ຽວກັບພາວະທາງອາລົມຂອງລາວບໍ່? ເຈົ້າຍັງບໍ່ສາມາດເຂົ້າໃຈມະນຸດທີ່ເຈົ້ານັບຖືຢ່າງແທ້ຈິງ ແລ້ວເຈົ້າຈະສາມາດເຂົ້າໃຈພຣະເຢຊູຄຣິດໄດ້ແນວໃດ? ທຸກສິ່ງທີ່ເຈົ້າເຂົ້າໃຈກ່ຽວກັບພຣະເຢຊູແມ່ນເຕັມໄປດ້ວຍຈິນຕະນາການ ແລະ ແນວຄິດ ແລະ ບໍ່ມີຄວາມຈິງ ຫຼື ຄວາມເປັນຈິງເລີຍ. ມັນມີກິ່ນເໝັນ ແລະ ເຕັມໄປດ້ວຍເນື້ອໜັງ. ຄວາມເຂົ້າໃຈດັ່ງກ່າວຈະເຮັດໃຫ້ເຈົ້າຕ້ອນຮັບການກັບມາຂອງພຣະເຢຊູໄດ້ແນວໃດ? ພຣະເຢຊູຈະບໍ່ຮັບຄົນເຫຼົ່ານັ້ນທີ່ເຕັມໄປດ້ວຍຄວາມເພີ້ຝັນ ແລະ ແນວຄິດແຫ່ງເນື້ອໜັງ. ຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພຣະເຢຊູຈະເໝາະແກ່ການເປັນຜູ້ເຊື່ອຂອງພຣະອົງໄດ້ແນວໃດ?

ພວກເຈົ້າຕ້ອງການຮູ້ເຖິງຕົ້ນຕໍຂອງເຫດຜົນທີ່ພວກຟາຣີຊາຍຕໍ່ຕ້ານພຣະເຢຊູບໍ? ພວກເຈົ້າຕ້ອງການຮູ້ແກ່ນແທ້ຂອງພວກຟາຣີຊາຍບໍ່? ພວກເຂົາເຕັມໄປດ້ວຍຄວາມເພີ້ຝັນກ່ຽວກັບພຣະເມຊີອາ. ນອກເໜືອໄປກວ່ານັ້ນ ພວກເຂົາພຽງແຕ່ເຊື່ອວ່າ ພຣະເມຊີອາຈະລົງມາ ແຕ່ບໍ່ສະແຫວງຫາຄວາມຈິງແຫ່ງຊີວິດ. ດ້ວຍເຫດນັ້ນ ພວກເຂົາຍັງຄົງລໍຖ້າພຣະເມຊີອາໃນປັດຈຸບັນ ເພາະພວກເຂົາບໍ່ມີຄວາມຮູ້ກ່ຽວກັບຫົນທາງແຫ່ງຊີວິດ ແລະ ບໍ່ຮູ້ວ່າ ຫົນທາງແຫ່ງຄວາມຈິງຄືຫຍັງ. ພວກເຈົ້າເວົ້າວ່າ ຄົນທີ່ໂງ່ຈ້າ, ດື້ດ້ານ ແລະ ຂາດຄວາມຮູ້ແບບນີ້ຈະຮັບພອນຂອງພຣະເຈົ້າໄດ້ແນວໃດ? ພວກເຂົາຈະເຫັນພຣະເມຊີອາໄດ້ແນວໃດ? ພວກເຂົາຕໍ່ຕ້ານພຣະເຢຊູ ກໍຍ້ອນພວກເຂົາບໍ່ຮູ້ທິດທາງຂອງພາລະກິດຂອງພຣະວິນຍານບໍລິສຸດ ຍ້ອນພວກເຂົາບໍ່ຮູ້ຫົນທາງແຫ່ງຄວາມຈິງທີ່ພຣະເຢຊູກ່າວເຖິງ ແລະ ນອກເໜືອໄປກວ່ານັ້ນ ກໍຍ້ອນພວກເຂົາບໍ່ເຂົ້າໃຈກ່ຽວກັບພຣະເມຊີອາ. ແລ້ວຍ້ອນວ່າພວກເຂົາບໍ່ເຄີຍເຫັນພຣະເມຊີອາ ແລະ ບໍ່ເຄີຍຢູ່ຮ່ວມກັບພຣະເມຊີອາ, ພວກເຂົາຈຶ່ງຜິດພາດໃນການຍຶດຕິດກັບນາມມະຍົດທີ່ທຳມະດາຂອງພຣະເມຊີອາ ໃນຂະນະທີ່ກຳລັງຕໍ່ຕ້ານແກ່ນແທ້ຂອງພຣະເມຊີອາດ້ວຍທຸກວິທີທາງທີ່ເປັນໄປໄດ້. ແກ່ນແທ້ຂອງພວກຟາຣີຊາຍແມ່ນຄວາມດື້ດ້ານ, ຄວາມອວດດີ ແລະ ບໍ່ເຊື່ອຟັງຄວາມຈິງ. ຫຼັກການແຫ່ງຄວາມເຊື່ອໃນພຣະເຈົ້າຂອງພວກເຂົາແມ່ນ: ເຖິງວ່າເຈົ້າຈະມີການເທດສະໜາ

ທີ່ມີຄວາມໝາຍເລິກເຊິ່ງ, ເຖິງເຈົ້າຈະມີອຳນາດທີ່ສູງສົ່ງ ເຈົ້າກໍບໍ່ແມ່ນພຣະຄຣິດ ນອກຈາກເຈົ້າຈະຖືກເອີ້ນວ່າ ພຣະເມຊີອາ. ຄວາມເຊື່ອນີ້ບໍ່ແມ່ນສິ່ງທີ່ຂັດກັບເຫດຜົນ ແລະ ເປັນຕາເບື່ອໜ່າຍບໍ? ເຮົາຂໍຖາມພວກເຈົ້າອີກວ່າ: ມັນບໍ່ງ່າຍສຳລັບພວກເຈົ້າຫຼາຍໄປບໍທີ່ຈະເຮັດຜິດພາດຄືກັບພວກຟາຣີຊາຍກ່ອນໜ້ານີ້ ໂດຍທີ່ພວກເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບພຣະເຢຊູແມ່ນແຕ່ໜ້ອຍດຽວ? ເຈົ້າສາມາດເບິ່ງຫົນທາງແຫ່ງຄວາມຈິງອອກບໍ່? ເຈົ້າສາມາດຮັບປະກັນໄດ້ບໍ່ວ່າ ເຈົ້າຈະບໍ່ຕໍ່ຕ້ານພຣະຄຣິດ? ເຈົ້າສາມາດຕິດຕາມພາລະກິດຂອງພຣະວິນຍານບໍລິສຸດໄດ້ບໍ່? ຖ້າເຈົ້າບໍ່ຮູ້ຈັກວ່າ ເຈົ້າຈະຕໍ່ຕ້ານພຣະຄຣິດ ຫຼື ບໍ່, ແລ້ວເຮົາເວົ້າວ່າ ເຈົ້າດຳລົງຊີວິດຢູ່ໃນຂອບເຂດໃກ້ຄວາມຕາຍແລ້ວ. ຄົນເຫຼົ່ານັ້ນທີ່ບໍ່ຮູ້ຈັກພຣະເມຊີອາສາມາດຕໍ່ຕ້ານພຣະເຢຊູ, ປະຕິເສດພຣະເຢຊູ ແລະ ກ່າວຮ້າຍພຣະອົງໄດ້ທັງໝົດ. ທຸກຄົນທີ່ບໍ່ເຂົ້າໃຈພຣະເຢຊູສາມາດປະຕິເສດພຣະອົງ ແລະ ດ່າພຣະອົງ. ຍິ່ງໄປກວ່ານັ້ນ ພວກເຂົາສາມາດເຫັນການກັບມາຂອງພຣະເຢຊູເປັນການຫຼອກລວງຂອງຊາຕານ ແລະ ມີຄົນຈຳນວນຫຼາຍຂຶ້ນຈະກ່າວໂທດພຣະເຢຊູທີ່ກັບມາເປັນມະນຸດ. ສິ່ງທັງໝົດນີ້ບໍ່ເຮັດໃຫ້ພວກເຈົ້າຢ້ານບໍ? ສິ່ງທີ່ພວກເຈົ້າຜະເຊີນຈະເປັນການໝິ່ນປະໝາດພຣະວິນຍານບໍລິສຸດ, ການຫຼົ້ມຈົມຂອງພຣະທຳຂອງພຣະວິນຍານບໍລິສຸດທີ່ມີຕໍ່ຄຣິສຕະຈັກ ແລະ ການປະຕິເສດແບບດູຖູກໃນທຸກສິ່ງທີ່ພຣະເຢຊູໄດ້ສຳແດງອອກ. ພວກເຈົ້າສາມາດຮັບຫຍັງຈາກພຣະເຢຊູຖ້າພວກເຈົ້າສັບສົນມຶນເມົາເຊັ່ນນີ້? ຖ້າພວກເຈົ້າປະຕິເສດບໍ່ຍອມຮັບເອົາຄວາມຜິດພາດຂອງພວກເຈົ້າຢ່າງດື້ດ້ານ, ພວກເຈົ້າຈະສາມາດເຂົ້າໃຈພາລະກິດຂອງພຣະເຢຊູເມື່ອພຣະອົງກັບມາເປັນມະນຸດເທິງເມກສີຂາວໄດ້ແນວໃດ? ເຮົາບອກພວກເຈົ້າສິ່ງນີ້: ຄົນທີ່ບໍ່ຮັບຄວາມຈິງ ແຕ່ລໍຖ້າການມາເຖິງຂອງພຣະເຢຊູເທິງເມກສີຂາວຢ່າງຕາບອດຈະໝິ່ນປະໝາດພຣະວິນຍານບໍລິສຸດຢ່າງແນ່ນອນ ແລະ ພວກເຂົາເປັນກຸ່ມຄົນທີ່ສົມຄວນຖືກທຳລາຍ. ພວກເຈົ້າພຽງແຕ່ຕ້ອງການພຣະຄຸນຂອງພຣະເຢຊູ ແລະ ພຽງແຕ່ຕ້ອງການຮັບອານາຈັກສະຫວັນທີ່ມີແຕ່ຄວາມສຸກ, ແຕ່ພວກເຈົ້າບໍ່ເຄີຍເຊື່ອຟັງພຣະທຳທີ່ພຣະເຢຊູກ່າວ ແລະ ບໍ່ເຄີຍຮັບເອົາຄວາມຈິງທີ່ພຣະເຢຊູສຳແດງອອກໃນເວລາທີ່ພຣະອົງກັບມາເປັນມະນຸດ. ພວກເຈົ້າຈະຍຶດຖືສິ່ງໃດເພື່ອແລກປ່ຽນກັບຄວາມຈິງທີ່ພຣະເຢຊູກັບມາເທິງເມກສີຂາວ? ຍຶດຖືຄວາມຈິງໃຈທີ່ພວກເຈົ້າເຮັດບາບຢູ່ຕະຫຼອດ ແລະ ຫຼັງຈາກນັ້ນກໍ່ກ່າວຄຳສາລະພາບຂອງເຈົ້າຊໍ້າແລ້ວຊໍ້າອີກນັ້ນບໍ? ພວກເຈົ້າຈະຖວາຍເຄື່ອງບູຊາຫຍັງໃຫ້ແກ່ພຣະເຢຊູ ຜູ້ທີ່ຈະກັບມາເທິງເມກສີຂາວ? ມັນເປັນປີແຫ່ງພາລະກິດທີ່ພວກເຈົ້າສັນລະເສີນຕົນເອງບໍ? ພວກເຈົ້າຈະຍຶດຖືສິ່ງໃດເພື່ອເຮັດໃຫ້ພຣະເຢຊູ ຜູ້ທີ່ຈະກັບມາ ເຊື່ອໃນຕົວເຈົ້າ? ມັນເປັນທຳມະຊາດຄວາມອວດດີຂອງເຈົ້າບໍທີ່ບໍ່ເຊື່ອຟັງຄວາມຈິງໃດໆ?

ຄວາມຈົງຮັກພັກດີຂອງພວກເຈົ້າເປັນພຽງແຕ່ຄຳເວົ້າເທົ່ານັ້ນ, ຄວາມຮູ້ຂອງພວກເຈົ້າກໍເປັນພຽງປັນຍາ ແລະ ຄວາມຄິດ, ຄວາມພະຍາຍາມຂອງພວກເຈົ້າແມ່ນເພື່ອຜົນປະໂຫຍດຂອງການໄດ້ຮັບພອນແຫ່ງສະຫວັນ ແລະ ດ້ວຍເຫດນີ້ ຄວາມເຊື່ອຂອງພວກເຈົ້າຕ້ອງເປັນໄປແບບໃດ? ແມ່ນແຕ່ໃນປັດຈຸບັນ ພວກເຈົ້າຍັງເຮັດຫູໜວກໃສ່ທຸກພຣະທຳແຫ່ງຄວາມຈິງ. ພວກເຈົ້າບໍ່ຮູ້ຈັກວ່າ ພຣະເຈົ້າແມ່ນຫຍັງ, ພວກເຈົ້າບໍ່ຮູ້ຈັກວ່າ ພຣະຄຣິດແມ່ນຫຍັງ, ພວກເຈົ້າບໍ່ຮູ້ຈັກວ່າ ຈະເຄົາລົບພຣະເຢໂຮວາ

ໄດ້ແນວໃດ, ພວກເຈົ້າບໍ່ຮູ້ຈັກວ່າ ຈະເຂົ້າສູ່ພາລະກິດຂອງພຣະວິນຍານບໍລິສຸດໄດ້ແນວໃດ ແລະ ພວກເຈົ້າບໍ່ຮູ້ຈັກວ່າ ຈະຈຳແນກລະຫວ່າງພາລະກິດຂອງພຣະເຈົ້າ ແລະ ກົນອຸບາຍຂອງມະນຸດໄດ້ແນວໃດ. ເຈົ້າຮູ້ຈັກພຽງແຕ່ກ່າວຕຳນິພຣະທຳແຫ່ງຄວາມຈິງໃດໜຶ່ງທີ່ພຣະເຈົ້າກ່າວ ເຊິ່ງບໍ່ເປັນໄປຕາມຄວາມຄິດຂອງເຈົ້າເອງ. ຄວາມຖ່ອມຕົວຂອງເຈົ້າຢູ່ໃສ? ຄວາມເຊື່ອຟັງຂອງເຈົ້າຢູ່ໃສ? ຄວາມສັດຊື່ຂອງເຈົ້າຢູ່ໃສ? ຄວາມຕ້ອງການສະແຫວງຫາຄວາມຈິງຂອງເຈົ້າຢູ່ໃສ? ຄວາມເຄົາລົບຂອງເຈົ້າສຳລັບພຣະເຈົ້າແມ່ນຢູ່ໃສ? ເຮົາບອກພວກເຈົ້າວ່າ ຄົນເຫຼົ່ານັ້ນທີ່ເຊື່ອໃນພຣະເຈົ້າຍ້ອນໝາຍສຳຄັນກໍ່ເປັນປະເພດຄົນທີ່ຈະຖືກທຳລາຍ. ຄົນເຫຼົ່ານັ້ນທີ່ບໍ່ສາມາດຮັບພຣະທຳຂອງພຣະເຢຊູ ຜູ້ທີ່ໄດ້ກັບມາເປັນມະນຸດກໍ່ເປັນລູກຫຼານຂອງນະຣົກ, ຜູ້ສືບເຊື້ອສາຍຂອງອັກຄະເທວະດາ ເຊິ່ງເປັນກຸ່ມຄົນທີ່ຈະໄດ້ຮັບຄວາມພິນາດຕະຫຼອດໄປເປັນນິດ. ຫຼາຍຄົນອາດບໍ່ສົນໃຈໃນສິ່ງທີ່ເຮົາບອກກ່າວ ແຕ່ເຮົາຍັງຢາກບອກໄພ່ພົນທີ່ຕິດຕາມພຣະເຢຊູທຸກຄົນວ່າ ເມື່ອພວກເຈົ້າເຫັນພຣະເຢຊູລົງມາຈາກແຜ່ນດິນສະຫວັນເທິງເມກສີຂາວດ້ວຍຕາຂອງພວກເຈົ້າເອງ ນີ້ຈະເປັນການປາກົດຕົວຢ່າງເປີດເຜີຍຂອງພຣະອາທິດແຫ່ງຄວາມທ່ຽງທຳ. ບາງເທື່ອ ນັ້ນຈະເປັນເວລາແຫ່ງຄວາມຕື່ນເຕັ້ນຢ່າງໃຫຍ່ສຳລັບເຈົ້າ ແຕ່ເຈົ້າຄວນຮູ້ວ່າ ເວລາທີ່ເຈົ້າເປັນພະຍານການລົງມາຂອງພຣະເຢຊູຈາກແຜ່ນດິນສະຫວັນຍັງເປັນເວລາທີ່ເຈົ້າຈະລົງນະຣົກເພື່ອຮັບການລົງໂທດອີກດ້ວຍ. ນັ້ນຈະເປັນເວລາແຫ່ງການສິ້ນສຸດຂອງແຜນການຄຸ້ມຄອງຂອງພຣະເຈົ້າ ແລະ ມັນເປັນເວລາທີ່ພຣະເຈົ້າໃຫ້ລາງວັນຄົນດີ ແລະ ລົງໂທດຄົນຊົ່ວ. ເນື່ອງຈາກວ່າ ການພິພາກສາຂອງພຣະເຈົ້າຈະສິ້ນສຸດລົງກ່ອນທີ່ມະນຸດຈະໄດ້ເຫັນໝາຍສຳຄັນໃນເວລາມີການສະແດງຄວາມຈິງເທົ່ານັ້ນ. ສະນັ້ນ ມີພຽງຜູ້ທີ່ຍອມຮັບຄວາມຈິງ ແລະ ບໍ່ສະແຫວງຫາໝາຍສຳຄັນຈະໄດ້ຮັບການຊໍາລະລ້າງໃຫ້ບໍລິສຸດ ເຊິ່ງຜູ້ຄົນເຫຼົ່ານີ້ຈະກັບມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ ແລະ ເຂົ້າຮ່ວມໃນອ້ອມກອດຂອງພຣະຜູ້ສ້າງ. ຜູ້ຄົນທີ່ຍຶດຖືໃນຄວາມເຊື່ອທີ່ວ່າ "ພຣະເຢຊູ ຜູ້ທີ່ບໍ່ໄດ້ຂີ່ເມກສີຂາວ ແມ່ນພຣະເຢຊູຕົວປອມ" ຈະໄດ້ຮັບການລົງໂທດຕະຫຼອດໄປເປັນນິດ ຍ້ອນພວກເຂົາເຊື່ອພຽງພຣະເຢຊູທີ່ກະທຳໝາຍສຳຄັນ ແຕ່ບໍ່ຮັບຮູ້ພຣະເຢຊູທີ່ປະກາດການພິພາກສາທີ່ຮ້າຍແຮງ ແລະ ເປີດເຜີຍຫົນທາງທີ່ແທ້ຈິງ ແລະ ຊີວິດ. ດ້ວຍເຫດນັ້ນ ເມື່ອພຣະເຢຊູກັບມາເທິງເມກສີຂາວຢ່າງເປີດເຜີຍ ພຣະອົງອາດຈັດການກັບພວກເຂົາ ເພາະພວກເຂົາດື້ດ້ານເກີນໄປ, ໝັ້ນໃຈໃນຕົວເອງເກີນໄປ ແລະ ອວດດີຫຼາຍເກີນໄປ. ຄົນເສື່ອມຊາມແບບນີ້ຈະໄດ້ຮັບລາງວັນຈາກພຣະເຈົ້າໄດ້ແນວໃດ? ການກັບມາຂອງພຣະເຢຊູແມ່ນຄວາມລອດພົ້ນທີ່ຍິ່ງໃຫຍ່ສຳລັບຜູ້ທີ່ສາມາດຍອມຮັບເອົາຄວາມຈິງ ແຕ່ສຳລັບຜູ້ທີ່ບໍ່ສາມາດຍອມຮັບຄວາມຈິງແມ່ນຈະຖືກຕັດສິນລົງໂທດ. ພວກເຈົ້າຄວນເລືອກເສັ້ນທາງຂອງພວກເຈົ້າເອງ ແລະ ບໍ່ຄວນໝິ່ນປະໝາດພຣະວິນຍານບໍລິສຸດ ແລະ ປະຕິເສດຄວາມຈິງ. ພວກເຈົ້າບໍ່ຄວນເປັນຄົນທີ່ໂງ່ຈ້າ ແລະ ອວດດີ ແຕ່ເປັນຄົນທີ່ເຊື່ອຟັງການນຳຂອງພຣະວິນຍານບໍລິສຸດ ແລະ ຈິ່ງປາດຖະໜາ ແລະ ສະແຫວງຫາຄວາມຈິງ; ດ້ວຍວິທີນີ້ເທົ່ານັ້ນທີ່ພວກເຈົ້າຈະໄດ້ຮັບຜົນປະໂຫຍດ. ເຮົາແນະນຳພວກເຈົ້າໃຫ້ຍ່າງຕາມເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າຢ່າງຈິງຈັງ. ຢ່າຟ້າວດ່ວນສະຫຼຸບ; ນອກເໜືອໄປກວ່ານັ້ນ ຢ່າເຮັດເປັນທຳມະດາ ແລະ ບໍ່

ໃສ່ໃຈກັບຄວາມເຊື່ອໃນພຣະເຈົ້າຂອງພວກເຈົ້າ. ພວກເຈົ້າຄວນຮູ້ຈັກວ່າ ຢ່າງໜ້ອຍທີ່ສຸດ ຜູ້ທີ່ເຊື່ອໃນພຣະເຈົ້າຄວນຖ່ອມຕົວ ແລະ ສະແດງຄວາມເຄົາລົບນັບຖື. ຜູ້ທີ່ໄດ້ຍິນຄວາມຈິງ ແຕ່ບໍ່ເຫັນດີນຳພ້ອມທັງດູຖູກ ແມ່ນຄົນທີ່ໂງ່ຈ້າ ແລະ ບໍ່ມີຄວາມຮູ້. ຜູ້ທີ່ໄດ້ຍິນຄວາມຈິງ ແຕ່ດ່ວນສະຫຼຸບຢ່າງບໍ່ມີເຫດຜົນ ຫຼື ຕຳນິມັນ ແມ່ນເຕັມໄປດ້ວຍຄວາມອວດດີ. ທຸກຄົນທີ່ເຊື່ອໃນພຣະເຢຊູບໍ່ຄວນສາບແຊ່ງ ຫຼື ກ່າວຕຳນິຄົນອື່ນ. ພວກເຈົ້າທຸກຄົນຄວນເປັນຄົນທີ່ມີຈິດສຳນຶກ ແລະ ເປັນຄົນຍອມຮັບຄວາມຈິງ. ບາງເທື່ອ ເມື່ອໄດ້ຍິນຫົນທາງແຫ່ງຄວາມຈິງ ແລະ ເມື່ອໄດ້ອ່ານພຣະທຳແຫ່ງຊີວິດ, ເຈົ້າເຊື່ອວ່າ ມີພຽງໜຶ່ງໃນ 10.000 ຄຳເຫຼົ່ານີ້ເທົ່ານັ້ນ ທີ່ສອດຄ່ອງກັບຄວາມເຊື່ອໝັ້ນຂອງເຈົ້າ ແລະ ສອດຄ່ອງກັບຂໍ້ຄວາມໃນພຣະຄຳພີ ແຕ່ເຖິງຢ່າງນັ້ນກໍຕາມ ເຈົ້າຄວນສືບຕໍ່ສະແຫວງຫາທັງໝົດຂອງ 10.000 ຄຳເຫຼົ່ານີ້. ເຮົາຍັງແນະນຳໃຫ້ເຈົ້າຖ່ອມຕົວ ບໍ່ໝັ້ນໃຈໃນຕົນເອງຫຼາຍເກີນໄປ ແລະ ບໍ່ສັນລະເສີນຕົນເອງສູງສົ່ງເກີນໄປ. ດ້ວຍຫົວໃຈແຫ່ງການເຄົາລົບພຣະເຈົ້າໜ້ອຍດຽວຂອງເຈົ້າ ເຈົ້າຈະໄດ້ຮັບແສງສະຫວ່າງທີ່ຍິ່ງໃຫຍ່ກວ່າ. ຖ້າເຈົ້າພິຈາລະນາຢ່າງລະມັດລະວັງ ແລະ ຕຶກຕອງພຣະທຳເຫຼົ່ານີ້ຊໍ້າໄປຊໍ້າມາ ເຈົ້າຈະເຂົ້າໃຈວ່າ ພຣະທຳເຫຼົ່ານັ້ນແມ່ນຄວາມຈິງຫຼືບໍ່ ແລະ ແມ່ນຊີວິດຫຼືບໍ່. ບາງເທື່ອ ການໄດ້ອ່ານສອງສາມປະໂຫຍກ ບາງຄົນຈະກ່າວຕຳນິພຣະທຳເຫຼົ່ານີ້ຢ່າງຕາບອດ ໂດຍກ່າວວ່າ “ນີ້ບໍ່ແມ່ນສິ່ງທີ່ຍິ່ງໃຫຍ່ໄປກວ່າການເຮັດໃຫ້ມີຄວາມສະຫວ່າງຂອງພຣະວິນຍານບໍລິສຸດ” ຫຼື “ນີ້ແມ່ນພຣະຄຣິດຕົວປອມທີ່ມາເພື່ອຫຼອກລວງຜູ້ຄົນ”. ຄົນເຫຼົ່ານັ້ນທີ່ເວົ້າສິ່ງເຫຼົ່ານີ້ແມ່ນຖືກເຮັດໃຫ້ຕາບອດດ້ວຍຄວາມໂງ່ຈ້າ! ເຈົ້າເຂົ້າໃຈພາລະກິດ ແລະ ສະຕິປັນຍາຂອງພຣະເຈົ້າພຽງແຕ່ໜ້ອຍດຽວ ແລະ ເຮົາແນະນຳໃຫ້ເຈົ້າເລີ່ມຕົ້ນໃໝ່ອີກຄັ້ງ! ພວກເຈົ້າຕ້ອງບໍ່ຫຼັບຫູຫຼັບຕາກ່າວຕຳນິພຣະທຳທີ່ພຣະເຈົ້າກ່າວ ຍ້ອນການປາກົດຂອງພຣະຄຣິດຕົວປອມໃນຍຸກສຸດທ້າຍ ແລະ ພວກເຈົ້າຕ້ອງບໍ່ເປັນຄົນທີ່ໝິ່ນປະໝາດພຣະວິນຍານບໍລິສຸດ ຍ້ອນພວກເຈົ້າຢ້ານກົນອຸບາຍ. ມັນຈະບໍ່ເປັນເລື່ອງທີ່ເປັນຕາເສຍດາຍຢ່າງຍິ່ງບໍ່? ຫຼັງຈາກການພິຈາລະນາ ຖ້າເຈົ້າຍັງເຊື່ອວ່າ ພຣະທຳເຫຼົ່ານີ້ບໍ່ແມ່ນຄວາມຈິງ, ບໍ່ມີທາງນັ້ນ ແລະ ບໍ່ແມ່ນການກ່າວຂອງພຣະເຈົ້າ ແລ້ວເຈົ້າຈະຖືກລົງໂທດໃນທີ່ສຸດ ແລະ ເຈົ້າຈະບໍ່ໄດ້ຮັບພອນ. ຖ້າເຈົ້າບໍ່ສາມາດຍອມຮັບຄວາມຈິງດັ່ງກ່າວທີ່ໄດ້ກ່າວຢ່າງແຈ່ມແຈ້ງ ແລະ ຊັດເຈນ ແລ້ວເຈົ້າເໝາະສົມກັບຄວາມລອດພົ້ນຂອງພຣະເຈົ້າບໍ່? ເຈົ້າບໍ່ແມ່ນຄົນທີ່ບໍ່ໄດ້ຮັບພອນຢ່າງພຽງພໍເພື່ອກັບມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າບໍ? ຈົ່ງຄິດທົບທວນເບິ່ງ! ຢ່າຟ້າວໃຈຮ້ອນ ແລະ ຫຸນຫັນ ແລະ ຢ່າປະຕິບັດຄວາມເຊື່ອໃນພຣະເຈົ້າຄືກັບເກມ. ຈົ່ງຄິດເຫັນແກ່ຜົນປະໂຫຍດຂອງຈຸດໝາຍປາຍທາງຂອງເຈົ້າ, ເຫັນແກ່ຜົນປະໂຫຍດຂອງຄວາມຄາດຫວັງຂອງເຈົ້າ, ເຫັນແກ່ຜົນປະໂຫຍດຂອງຊີວິດຂອງເຈົ້າ ແລະ ຢ່າຫຼິ້ນຕົນເອງ. ເຈົ້າສາມາດຍອມຮັບພຣະທຳເຫຼົ່ານີ້ບໍ່?

# ຜູ້ທີ່ບໍ່ສາມາດເຂົ້າກັບພຣະຄຣິດ ເປັນປໍລະປັກກັບພຣະເຈົ້າຢ່າງແນ່ນອນ

ມະນຸດທຸກຄົນປາຖະໜາຢາກເຫັນໃບໜ້າທີ່ແທ້ຈິງຂອງພຣະເຢຊູ ແລະ ທຸກຄົນປາຖະໜາຢາກຢູ່ກັບພຣະອົງ. ເຮົາບໍ່ຄິດວ່າອ້າຍເອື້ອຍນ້ອງຄົນໃດໜຶ່ງຈະເວົ້າວ່າ ພວກເຂົາບໍ່ປາຖະໜາຢາກເຫັນ ຫຼື ຢູ່ກັບພຣະເຢຊູ. ກ່ອນທີ່ພວກເຈົ້າຈະໄດ້ເຫັນພຣະເຢຊູ ນັ້ນກໍ່ຄື ກ່ອນທີ່ພວກເຈົ້າຈະໄດ້ເຫັນພຣະເຈົ້າທີ່ບັງເກີດເປັນມະນຸດນັ້ນ, ພວກເຈົ້າອາດມີແນວຄິດຕ່າງໆນາໆກ່ຽວກັບພຣະອົງ ຕົວຢ່າງ: ກ່ຽວກັບຮູບລັກສະນະຂອງພຣະເຢຊູ, ວິທີການເວົ້າຂອງພຣະອົງ, ວິຖີຊີວິດຂອງພຣະອົງ ແລະ ອື່ນໆ. ແຕ່ຫຼັງຈາກທີ່ພວກເຈົ້າໄດ້ເຫັນພຣະອົງຢ່າງແທ້ຈິງແລ້ວ, ແນວຄິດຂອງພວກເຈົ້າກໍ່ຈະປ່ຽນໄປຢ່າງໄວວາ. ເປັນຫຍັງຈຶ່ງເປັນແນວນີ້? ພວກເຈົ້າຢາກຮູ້ບໍ? ຄວາມຄິດຂອງມະນຸດແມ່ນບໍ່ສາມາດເບິ່ງຂ້າມໄດ້ ເຊິ່ງເປັນຄວາມຈິງ, ແຕ່ຍິ່ງໄປກວ່ານັ້ນ ແກ່ນແທ້ຂອງພຣະຄຣິດບໍ່ຍອມໃຫ້ມະນຸດມາປ່ຽນແປງໄດ້. ພວກເຈົ້າຄິດວ່າພຣະຄຣິດເປັນອຳມະຕະ ຫຼື ນັກປາດ, ແຕ່ບໍ່ມີໃຜພິຈາລະນາວ່າພຣະອົງເປັນມະນຸດທຳມະດາທີ່ມີແກ່ນແທ້ຂອງພຣະເຈົ້າ. ເມື່ອເປັນດັ່ງນັ້ນ, ຫຼາຍຄົນທີ່ສະແຫວງຫາໝົດມື້ໝົດຄືນເພື່ອຈະໄດ້ເຫັນພຣະເຈົ້ານັ້ນກໍ່ເປັນສັດຕູຂອງພຣະເຈົ້າແທ້ໆ ແລະ ບໍ່ສາມາດເຂົ້າກັບພຣະອົງໄດ້. ນີ້ບໍ່ແມ່ນຄວາມຜິດພາດໃນສ່ວນຂອງມະນຸດບໍ? ແມ່ນແຕ່ໃນເວລານີ້ ພວກເຈົ້າກໍ່ຍັງຄິດວ່າ ຄວາມເຊື່ອ ແລະ ຄວາມຈົງຮັກພັກດີຂອງພວກເຈົ້າແມ່ນພຽງພໍທີ່ຈະເຮັດໃຫ້ພວກເຈົ້າໄດ້ເຫັນໃບໜ້າຂອງພຣະຄຣິດ, ແຕ່ເຮົາຂໍແນະນຳໃຫ້ພວກເຈົ້າປະກອບຕົນເອງອີກຫຼາຍຢ່າງທີ່ເປັນຈິງກວ່ານີ້! ສຳລັບໃນອະດີດ, ປັດຈຸບັນ ແລະ ໃນອະນາຄົດ, ຫຼາຍຄົນຜູ້ທີ່ໄດ້ເຂົ້າມາພົວພັນກັບພຣະຄຣິດໄດ້ລົ້ມເຫຼວ ແລະ ຈະລົ້ມເຫຼວ; ພວກເຂົາທຸກຄົນເຮັດບົດບາດເປັນພວກຟາຣີຊາຍ. ເຫດຜົນສຳລັບຄວາມລົ້ມເຫຼວຂອງພວກເຈົ້າແມ່ນຫຍັງ? ມັນເປັນຍ້ອນວ່າມີພຣະເຈົ້າທີ່ສູງສົ່ງ ແລະ ສົມຄວນໄດ້ຮັບການສັນລະເສີນແທ້ໆໃນແນວຄິດຂອງພວກເຈົ້າ. ແຕ່ຄວາມຈິງບໍ່ໄດ້ເປັນດັ່ງທີ່ມະນຸດຄາດຫວັງໄວ້ເລີຍ. ພຣະຄຣິດບໍ່ພຽງແຕ່ບໍ່ໄດ້ສູງສົ່ງເທົ່ານັ້ນ, ແຕ່ພຣະອົງຍັງຕ້ອຍຕ່ຳເປັນພິເສດ; ພຣະອົງບໍ່ພຽງແຕ່ເປັນມະນຸດເທົ່ານັ້ນ, ແຕ່ພຣະອົງຍັງເປັນມະນຸດທຳມະດາ; ພຣະອົງບໍ່ພຽງແຕ່ບໍ່ສາມາດຂຶ້ນສູ່ສະຫວັນໄດ້, ແຕ່ພຣະອົງເຖິງກັບບໍ່ສາມາດເຄື່ອນໄຫວໄປມາໄດ້ຢ່າງເສລີເທິງແຜ່ນດິນໂລກ. ແລ້ວເມື່ອເປັນແບບນັ້ນ, ຜູ້ຄົນຈຶ່ງປະຕິບັດຕໍ່ພຣະອົງຄືກັບທີ່ພວກເຂົາປະຕິບັດຕໍ່ມະນຸດທຳມະດາຄົນໜຶ່ງ; ເມື່ອພວກເຂົາຢູ່ກັບພຣະອົງ ພວກເຂົາກໍ່ປະຕິບັດຕໍ່ພຣະອົງໂດຍເປັນກັນເອງ ແລະ ເວົ້າກັບພຣະອົງໂດຍບໍ່ສົນໃຈຫຍັງ, ໃນຂະນະດຽວກັນກໍ່ຍັງລໍຖ້າການມາຂອງ “ພຣະຄຣິດທີ່ແທ້ຈິງ” ຢູ່ຕະຫຼອດເວລາ. ພວກເຈົ້າຖືພຣະຄຣິດທີ່ສະເດັດມາແລ້ວຄືກັບມະນຸດທຳມະດາຄົນໜຶ່ງ ແລະ ຖືພຣະທຳຂອງພຣະອົງຄືກັບຄຳເວົ້າຂອງມະນຸດທຳມະດາຄົນໜຶ່ງ. ດ້ວຍເຫດນີ້, ພວກເຈົ້າຈຶ່ງບໍ່ໄດ້ຮັບຫຍັງຈາກພຣະຄຣິດ ແລະ ກົງກັນຂ້າມ ຍັງໄດ້ສະແດງຄວາມໜ້າລັງກຽດທັງໝົດຂອງພວກເຈົ້າອອກມາໃຫ້ເຫັນອີກດ້ວຍ.

ກ່ອນການຕິດຕໍ່ພົວພັນກັບພຣະຄຣິດ, ເຈົ້າອາດຈະເຊື່ອວ່າອຸປະນິໄສຂອງເຈົ້າໄດ້ປ່ຽນແປງໄປ

ໝົດແລ້ວ, ເຈົ້າຄືຜູ້ຕິດຕາມທີ່ຈິງຮັກພັກດີຂອງພຣະຄຣິດ, ບໍ່ມີຜູ້ໃດທີ່ສົມຄວນຈະໄດ້ຮັບພອນຈາກພຣະຄຣິດໄປຫຼາຍກວ່າເຈົ້າແລ້ວ ແລະ ຫຼັງຈາກທີ່ໄດ້ເດີນທາງຫຼາຍເສັ້ນທາງ, ໄດ້ສຳເລັດວຽກງານຫຼາຍຢ່າງ ແລະ ເກີດໝາກຜົນຢ່າງຫຼວງຫຼາຍ, ເຈົ້າຈະເປັນຄົນໜຶ່ງໃນບັນດາຜູ້ທີ່ຈະໄດ້ຮັບມົງກຸດໃນທີ່ສຸດຢ່າງແນ່ນອນ. ແຕ່ມີຄວາມຈິງໜຶ່ງຢ່າງທີ່ເຈົ້າອາດຈະບໍ່ຮູ້: ອຸປະນິໄສເສື່ອມຊາມຂອງມະນຸດ ແລະ ຄວາມກະບົດ ແລະ ການຕໍ່ຕ້ານຂອງເຂົາໄດ້ຖືກເປີດໂປງອອກມາ ເມື່ອເຂົາພົບກັບພຣະຄຣິດ ແລະ ຄວາມກະບົດ ແລະ ການຕໍ່ຕ້ານທີ່ຖືກເປີດໂປງໃນປັດຈຸບັນແມ່ນຖືກເປີດໂປງຢ່າງຈະແຈ້ງ ແລະ ສົມບູນກວ່າເວລາຊ່ວງອື່ນ. ມັນເປັນຍ້ອນວ່າ ພຣະຄຣິດຄືບຸດມະນຸດ ນັ້ນກໍ່ຄື ບຸດມະນຸດທີ່ມີຄວາມເປັນມະນຸດທຳມະດາ, ມະນຸດຈຶ່ງບໍ່ໃຫ້ກຽດ ຫຼື ເຄົາລົບພຣະອົງ. ມັນເປັນຍ້ອນວ່າ ພຣະເຈົ້າສະຖິດຢູ່ໃນເນື້ອໜັງ, ຄວາມກະບົດຂອງມະນຸດຈຶ່ງເປີດເຜີຍອອກຢ່າງຈະແຈ້ງ ແລະ ຢ່າງລາຍລະອຽດທີ່ສຸດ. ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ການມາຂອງພຣະຄຣິດແມ່ນໄດ້ເປີດເຜີຍຄວາມກະບົດທັງໝົດຂອງມະນຸດ ແລະ ໄດ້ປ່ຽນແປງທາດແທ້ຂອງມະນຸດຊາດຢ່າງແທ້ຈິງ. ສິ່ງນີ້ແມ່ນເອີ້ນວ່າ "ການລໍ້ເສືອລົງຈາກພູເຂົາ" ແລະ "ການລໍ້ໝາປ່າອອກຈາກຖໍ້າຂອງມັນ". ເຈົ້າກ້າເວົ້າວ່າ ເຈົ້າຈິງຮັກພັກດີຕໍ່ພຣະເຈົ້າບໍ? ເຈົ້າກ້າເວົ້າວ່າ ເຈົ້າສະແດງຄວາມເຊື່ອຟັງຢ່າງແທ້ຈິງຕໍ່ພຣະເຈົ້າບໍ? ເຈົ້າກ້າເວົ້າວ່າ ເຈົ້າບໍ່ໄດ້ກະບົດບໍ່? ບາງຄົນຈະບອກວ່າ "ເມື່ອໃດກໍ່ຕາມທີ່ພຣະເຈົ້າຈັດສາກໃຫ້ຂ້ານ້ອຍຢູ່ໃນກັບສະພາບແວດລ້ອມໃໝ່, ຂ້ານ້ອຍກໍ່ຈະຍອມຮັບໂດຍບໍ່ຈົ່ມຕໍ່ວ່າ ແລະ ຍິ່ງໄປກວ່ານັ້ນ ຂ້ານ້ອຍຈະບໍ່ສະແດງແນວຄິດຫຍັງກ່ຽວກັບພຣະເຈົ້າ". ບາງຄົນຈະເວົ້າວ່າ "ບໍ່ວ່າພຣະເຈົ້າຈະມອບວຽກອັນໃດໃຫ້ກັບຂ້ານ້ອຍ, ຂ້ານ້ອຍກໍ່ຈະເຮັດສຸດຄວາມສາມາດຂອງຂ້ານ້ອຍ ແລະ ບໍ່ປະໝາດຈັກເທື່ອ". ໃນກໍລະນີນັ້ນ, ເຮົາຂໍຖາມພວກເຈົ້າແດ່ວ່າ: ໃນເວລາທີ່ພວກເຈົ້າດຳລົງຊີວິດຮ່ວມກັບພຣະຄຣິດ ພວກເຈົ້າສາມາດເຂົ້າກັບພຣະອົງໄດ້ບໍ? ແລ້ວພວກເຈົ້າຈະສາມາດເຂົ້າກັບພຣະອົງໄດ້ດົນປານໃດ? ໜຶ່ງມື້? ສອງມື້? ໜຶ່ງຊົ່ວໂມງ? ສອງຊົ່ວໂມງ? ຄວາມເຊື່ອຂອງພວກເຈົ້າອາດຈະເປັນຕາສັນລະເສີນ, ແຕ່ພວກເຈົ້າບໍ່ມີຄວາມໝັ້ນຄົງຫຍັງເລີຍ. ຫຼັງຈາກທີ່ເຈົ້າໄດ້ດຳເນີນຊີວິດຢູ່ກັບພຣະຄຣິດຢ່າງແທ້ຈິງແລ້ວ, ການຖືວ່າຕົນເອງຊອບທຳ ແລະ ການຖືວ່າຕົນເອງສຳຄັນກໍ່ຈະຖືກເປີດໂປງຜ່ານຄຳເວົ້າ ແລະ ການກະທຳຂອງເຈົ້າເທື່ອລະໜ້ອຍ ແລະ ຄວາມຕ້ອງການທີ່ໂອຫັງ, ຊຸດຄວາມຄິດທີ່ບໍ່ເຊື່ອຟັງ ແລະ ຄວາມບໍ່ພໍໃຈຂອງເຈົ້າກໍ່ຈະຄ່ອຍໆຖືກເປີດເຜີຍອອກມາໃຫ້ເຫັນໂດຍທຳມະຊາດເຊັ່ນກັນ. ສຸດທ້າຍ, ຄວາມອວດດີຂອງເຈົ້າກໍ່ຈະຮ້າຍແຮງຂຶ້ນ, ຈົນເຈົ້າຕໍ່ຕ້ານພຣະຄຣິດຫຼາຍຂຶ້ນປຽບຄືນໍ້າກັບໄຟ ແລະ ແລ້ວທຳມະຊາດຂອງເຈົ້າກໍ່ຈະຖືກເປີດເຜີຍອອກມາຢ່າງສົມບູນ. ໃນເວລານັ້ນ, ຄວາມຄິດຂອງເຈົ້າຈະບໍ່ສາມາດປົກປິດໄດ້ອີກຕໍ່ໄປ, ການຈົ່ມຕໍາວ່າກໍ່ຈະປາກົດຂຶ້ນໂດຍທຳມະຊາດ ແລະ ຄວາມເປັນມະນຸດທີ່ເສື່ອມເສຍຂອງເຈົ້າກໍ່ຈະຖືກເປີດໂປງອອກມາຢ່າງສົມບູນເຊັ່ນກັນ. ເຖິງແນວໃດກໍ່ຕາມ, ແມ່ນແຕ່ໃນເມື່ອນັ້ນ ເຈົ້າກໍ່ຍັງປະຕິເສດທີ່ຈະຮັບຮູ້ຄວາມກະບົດຂອງເຈົ້າເອງ ໂດຍເຊື່ອວ່າພຣະຄຣິດໃນຮູບລັກສະນະນີ້ແມ່ນຍາກທີ່ມະນຸດຈະຍອມຮັບເອົາ, ພຣະອົງເຂັ້ມງວດກັບມະນຸດເກີນໄປ ແລະ ຖ້າພຣະອົງເປັນພຣະຄຣິດທີ່ມີຄວາມເມດຕາກວ່ານີ້ ເຈົ້າຈະຍອມຮັບເອົາທັງໝົດ. ພວກເຈົ້າເຊື່ອວ່າ ຄວາມກະບົດຂອງພວກເຈົ້າ

ແມ່ນມີເຫດຜົນ, ພວກເຈົ້າພຽງແຕ່ກະບົດຕໍ່ພຣະອົງ ເມື່ອພຣະອົງໄດ້ບົບບັງຄັບພວກເຈົ້າເກີນໄປ. ພວກເຈົ້າບໍ່ເຄີຍພິຈາລະນາວ່າພວກເຈົ້າບໍ່ໄດ້ເບິ່ງວ່າພຣະຄຣິດເປັນພຣະເຈົ້າ, ພວກເຈົ້າບໍ່ເຄີຍມີເຈດຕະນາທີ່ຈະເຊື່ອຟັງພຣະອົງແມ່ນແຕ່ຄັ້ງດຽວ. ກົງກັນຂ້າມ, ເຈົ້າຢືນຢັນຢ່າງຫົວດື້ວ່າພຣະຄຣິດດຳເນີນພາລະກິດໂດຍອີງຕາມຄວາມປາດຖະໜາຂອງເຈົ້າເອງ ແລະ ທັນທີທີ່ພຣະອົງເຮັດສິ່ງໃດໜຶ່ງທີ່ຂັດແຍ່ງກັບຄວາມຄິດຂອງເຈົ້າເອງ, ເຈົ້າກໍ່ເຊື່ອວ່າພຣະອົງບໍ່ແມ່ນພຣະເຈົ້າ ແຕ່ເປັນມະນຸດ. ບໍ່ໄດ້ມີຫຼາຍຄົນໃນບັນດາພວກເຈົ້າທີ່ໂຕ້ຖຽງກັບພຣະອົງໃນລັກສະນະນີ້ບໍ? ໃນທີ່ສຸດແລ້ວ ພວກເຈົ້າເຊື່ອໃຜ? ແລ້ວພວກເຈົ້າສະແຫວງຫາໃນລັກສະນະໃດ?

ພວກເຈົ້າປາດຖະໜາຢາກເຫັນພຣະຄຣິດຢູ່ຕະຫຼອດ, ແຕ່ເຮົາວິງວອນໃຫ້ພວກເຈົ້າບໍ່ຄວນໃຫ້ຄວາມເຄົາລົບນັບຖືຕົນເອງສູງແບບນັ້ນ; ຄົນໃດໜຶ່ງອາດຈະເຫັນພຣະຄຣິດ, ແຕ່ເຮົາບອກວ່າບໍ່ມີໃຜສົມຄວນໄດ້ເຫັນພຣະຄຣິດ. ເພາະວ່າທຳມະຊາດຂອງມະນຸດແມ່ນເຕັມລົ້ນໄປດ້ວຍຄວາມຊົ່ວຮ້າຍ, ຄວາມອວດດີ ແລະ ຄວາມກະບົດ, ໃນຊ່ວງເວລາທີ່ເຈົ້າເຫັນພຣະຄຣິດ, ທຳມະຊາດຂອງເຈົ້າກໍ່ຈະທຳລາຍເຈົ້າ ແລະ ລົງໂທດເຈົ້າຈົນຕາຍ. ການພົວພັນຂອງເຈົ້າກັບອ້າຍນ້ອງ (ຫຼື ເອື້ອຍນ້ອງ) ອາດຈະບໍ່ສະແດງຫຼາຍຢ່າງກ່ຽວກັບເຈົ້າ, ແຕ່ມັນບໍ່ແມ່ນເລື່ອງງ່າຍເມື່ອເຈົ້າພົວພັນກັບພຣະຄຣິດ. ໃນເວລາໃດໜຶ່ງ, ຄວາມຄິດຂອງເຈົ້າອາດຢັ່ງຮາກ, ຄວາມອວດດີຂອງເຈົ້າຈະເລີ່ມງອກເງີຍ ແລະ ຄວາມກະບົດຂອງເຈົ້າກໍ່ຈະເກີດໝາກ. ເຈົ້າຜູ້ທີ່ມີຄວາມເປັນມະນຸດດັ່ງກ່າວຈະເໝາະສົມທີ່ຈະພົວພັນກັບພຣະຄຣິດໄດ້ແນວໃດ? ເຈົ້າສາມາດປະຕິບັດຕໍ່ພຣະອົງເໝືອນດັ່ງພຣະອົງເປັນພຣະເຈົ້າໃນທຸກຊ່ວງເວລາຂອງທຸກໆມື້ຢ່າງແທ້ຈິງໄດ້ບໍ? ເຈົ້າມີຄວາມເປັນຈິງໃນການຍອມຕາມພຣະເຈົ້າຢ່າງແທ້ຈິງບໍ? ພວກເຈົ້ານະມັດສະການພຣະເຈົ້າອົງສູງສົ່ງທີ່ຢູ່ພາຍໃນຫົວໃຈຂອງພວກເຈົ້າວ່າເປັນພຣະເຢໂຮວາ, ໃນຂະນະທີ່ຖືພຣະຄຣິດທີ່ສາມາດເບິ່ງເຫັນໄດ້ວ່າເປັນພຽງມະນຸດຄົນໜຶ່ງ. ຄວາມຮູ້ສຶກຂອງພວກເຈົ້າຕໍ່າເກີນໄປ ແລະ ຄວາມເປັນມະນຸດຂອງພວກເຈົ້າເສື່ອມເສຍເກີນໄປ! ພວກເຈົ້າບໍ່ສາມາດນັບຖືວ່າພຣະຄຣິດເປັນພຣະເຈົ້າຢູ່ສະເໝີ; ພຽງແຕ່ບາງກາລະໂອກາດເທົ່ານັ້ນ, ເມື່ອມັນເປັນໄປຕາມຈິນຕະນາການຂອງພວກເຈົ້າ, ເຈົ້າກໍ່ຮັບເອົາພຣະອົງ ແລະ ນະມັດສະການພຣະອົງໃຫ້ເປັນພຣະເຈົ້າ. ນີ້ແມ່ນເຫດຜົນທີ່ເຮົາເວົ້າວ່າພວກເຈົ້າບໍ່ແມ່ນຜູ້ເຊື່ອໃນພຣະເຈົ້າ ແຕ່ແມ່ນກຸ່ມຜູ້ສົມຮູ້ຮ່ວມຄິດທີ່ຕໍ່ສູ້ພຣະຄຣິດ. ແມ່ນແຕ່ມະນຸດຜູ້ທີ່ສະແດງຄວາມເມດຕາຕໍ່ກັບຜູ້ອື່ນກໍ່ຍັງໄດ້ຮັບການຕອບແທນ, ແຕ່ພຣະຄຣິດຜູ້ທີ່ໄດ້ກະທຳພາລະກິດດັ່ງກ່າວໃຫ້ກັບພວກເຈົ້າພັດບໍ່ໄດ້ຮັບຄວາມຮັກຈາກມະນຸດ ຫຼື ການຕອບແທນ ແລະ ການຍອມອ່ອນນ້ອມຈາກມະນຸດເລີຍ. ນີ້ບໍ່ແມ່ນສິ່ງທີ່ໜ້າເສົ້າສະລົດໃຈບໍ?

ມັນອາດຈະເປັນຍ້ອນວ່າໃນຕະຫຼອດເວລາຫຼາຍປີທີ່ເຈົ້າເຊື່ອໃນພຣະເຈົ້າ, ເຈົ້າບໍ່ເຄີຍສາບແຊ່ງຜູ້ໃດ ຫຼື ກະທຳການທີ່ບໍ່ດີໃດໆ, ແຕ່ໃນການພົວພັນຂອງເຈົ້າກັບພຣະຄຣິດ, ເຈົ້າບໍ່ສາມາດເວົ້າຄວາມຈິງ, ປະຕິບັດຢ່າງຊື່ສັດ ຫຼື ເຊື່ອຟັງພຣະທຳຂອງພຣະຄຣິດ; ໃນກໍລະນີນັ້ນ, ເຮົາບອກໄດ້ເລີຍວ່າເຈົ້າເປັນບຸກຄົນທີ່ຊົ່ວຮ້າຍ ແລະ ຊົ່ວຊ້າທີ່ສຸດໃນໂລກ. ເຈົ້າອາດຈະເປັນມິດເປັນພິເສດ ແລະ ອຸທິດຕົນຕໍ່ຍາດພີ່ນ້ອງ, ໝູ່ເພື່ອນ, ເມຍ (ຫຼື ຜົວ), ລູກຊາຍ ແລະ ລູກສາວ ແລະ ພໍ່ແມ່ຂອງເຈົ້າ ແລະ ບໍ່ເຄີຍ

ເອົາປຽບຄົນອື່ນເລີຍ, ແຕ່ຖ້າເຈົ້າບໍ່ສາມາດເຂົ້າກັບພຣະຄຣິດໄດ້, ຖ້າເຈົ້າບໍ່ສາມາດມີປະຕິສຳພັນຢ່າງສະໜານສັນກັບພຣະອົງໄດ້, ແລ້ວເຖິງແມ່ນວ່າເຈົ້າຈະເສຍສະຫຼະທຸກສິ່ງຂອງເຈົ້າເພື່ອຊ່ວຍເຫຼືອເພື່ອນບ້ານຂອງເຈົ້າ ຫຼື ເອົາໃຈໃສ່ດູແລເບິ່ງແຍງພໍ່, ແມ່ ແລະ ສະມາຊິກໃນຄອບຄົວຂອງເຈົ້າຢ່າງຮອບດ້ານ, ເຮົາຂໍບອກເຈົ້າເລີຍວ່າ ເຈົ້າຍັງຊົ່ວຮ້າຍຢູ່ ແລະ ຍິ່ງໄປກວ່ານັ້ນກໍ່ຍັງເປັນຄົນທີ່ເຕັມໄປດ້ວຍການຫຼອກລວງ. ຢ່າຄິດວ່າຕົນເອງສາມາດເຂົ້າກັບພຣະຄຣິດໄດ້ພຽງແຕ່ຍ້ອນວ່າເຈົ້າເຂົ້າກັບຄົນອື່ນໄດ້ດີ ຫຼື ເຮັດການກະທຳທີ່ດີພຽງສອງສາມຢ່າງເທົ່ານັ້ນ. ເຈົ້າຄິດວ່າເຈດຕະນາທີ່ເຕັມໄປດ້ວຍກຸສົນຂອງເຈົ້າຈະສາມາດຫຼອກລວງພອນຈາກສະຫວັນບໍ? ເຈົ້າຄິດວ່າການເຮັດດີສອງສາມຢ່າງຈະທົດແທນຄວາມເຊື່ອຟັງຂອງເຈົ້າໄດ້ບໍ? ບໍ່ມີໃຜໃນບັນດາພວກເຈົ້າທີ່ສາມາດຍອມຮັບເອົາການຖືກຈັດການ ແລະ ລິຮານ ແລະ ພວກເຈົ້າທຸກຄົນກໍ່ເຫັນວ່າມັນຫຍຸ້ງຍາກທີ່ຈະຮັບເອົາຄວາມເປັນມະນຸດປົກກະຕິຂອງພຣະຄຣິດ, ເຖິງແມ່ນວ່າເຈົ້າກຳລັງປ່າວປະກາດການເຊື່ອຟັງຂອງເຈົ້າຕໍ່ພຣະເຈົ້າຢູ່ກໍ່ຕາມ. ຄວາມເຊື່ອດັ່ງກ່າວຂອງພວກເຈົ້າຈະກໍ່ໃຫ້ເກີດຜົນກຳສະໜອງທີ່ເໝາະສົມ. ຢຸດມົວເມົາກັບພາບລວງຕາທີ່ເພີ້ຝັນ ແລະ ຄວາມປາດຖະໜາຢາກເຫັນພຣະຄຣິດໄດ້ແລ້ວ, ຍ້ອນພວກເຈົ້າມີວຸດທິພາວະທີ່ຕໍ່າເກີນໄປ, ຫຼາຍຈົນວ່າພວກເຈົ້າເຖິງກັບບໍ່ສົມຄວນທີ່ຈະເຫັນພຣະອົງ. ເມື່ອເຈົ້າກຳຈັດຄວາມກະບົດຂອງເຈົ້າໃຫ້ໝົດສິ້ນ ແລະ ສາມາດເຂົ້າກັບພຣະຄຣິດໄດ້ຢ່າງສະໜານສັນ, ໃນຊ່ວງເວລານັ້ນ ພຣະເຈົ້າຈະປາກົດໃຫ້ເຈົ້າເຫັນໂດຍທຳມະຊາດ. ຖ້າເຈົ້າໄປພົບພຣະເຈົ້າໂດຍບໍ່ໄດ້ຜ່ານການລິຮານ ຫຼື ການພິພາກສາ, ແລ້ວເຈົ້າຈະກາຍເປັນປໍລະປັກຕໍ່ພຣະເຈົ້າ ແລະ ຖືກລົງໂທດໃຫ້ພິນາດຢ່າງແນ່ນອນ. ທຳມະຊາດຂອງມະນຸດຄືການເປັນປໍລະປັກຕໍ່ພຣະເຈົ້າໂດຍກຳເນີດ ເພາະມະນຸດທຸກຄົນໄດ້ຖືກຄອບງຳໂດຍຄວາມເສື່ອມຊາມທີ່ສຸດຂອງຊາຕານ. ຖ້າມະນຸດພະຍາຍາມພົວພັນກັບພຣະເຈົ້າຈາກທ່າມກາງຄວາມເສື່ອມຊາມຂອງເຂົາເອງ, ແນ່ນອນວ່າ ມັນບໍ່ມີຫຍັງດີເກີດຂຶ້ນຈາກສິ່ງນີ້ໄດ້; ການກະທຳ ແລະ ຄຳເວົ້າຂອງເຂົາຈະເປີດເຜີຍເຖິງຄວາມເສື່ອມຊາມຂອງເຂົາໃນທຸກດ້ານ ແລະ ໃນການພົວພັນກັບພຣະເຈົ້າ ຄວາມກະບົດຂອງມະນຸດກໍ່ຈະຖືກເປີດເຜີຍອອກມາໃນທຸກໆດ້ານ. ມະນຸດມາຕໍ່ຕ້ານພຣະຄຣິດ, ຫຼອກລວງພຣະຄຣິດ ແລະ ປະຖິ້ມພຣະຄຣິດໂດຍບໍ່ຮູ້ຕົວ; ເມື່ອສິ່ງນີ້ເກີດຂຶ້ນ, ມະນຸດຍິ່ງຈະຢູ່ໃນສະພາບທີ່ອັນຕະລາຍທີ່ສຸດ ແລະ ຖ້າສິ່ງນີ້ຍັງສືບຕໍ່, ເຂົາຈະກາຍມາເປັນເປົ້າໝາຍທີ່ຈະຖືກລົງໂທດ.

ບາງຄົນອາດຈະເຊື່ອວ່າ ຖ້າການພົວພັນກັບພຣະເຈົ້າອັນຕະລາຍຫຼາຍ ແລ້ວມັນກໍ່ອາດຈະເປັນການສະຫຼາດກວ່າທີ່ຈະຢູ່ຫ່າງພຣະເຈົ້າ. ຄົນແບບນີ້ຈະສາມາດໄດ້ຮັບຫຍັງໄດ້ແດ່? ພວກເຂົາສາມາດຊື່ສັດຕໍ່ພຣະເຈົ້າໄດ້ບໍ? ແນ່ນອນວ່າ ການພົວພັນກັບພຣະເຈົ້າເປັນເລື່ອງຫຍຸ້ງຍາກຫຼາຍ ແຕ່ທັງໝົດນັ້ນກໍ່ເປັນຍ້ອນມະນຸດເສື່ອມຊາມ, ບໍ່ແມ່ນຍ້ອນພຣະເຈົ້າບໍ່ສາມາດພົວພັນກັບເຂົາໄດ້. ມັນຈະເປັນການດີທີ່ສຸດສຳລັບພວກເຈົ້າທີ່ຈະອຸທິດຄວາມພະຍາຍາມຫຼາຍກວ່ານີ້ຕໍ່ກັບຄວາມຈິງໃນການຮູ້ຈັກຕົນເອງ. ເປັນຫຍັງພວກເຈົ້າຈຶ່ງບໍ່ໄດ້ຮັບຄວາມຮັກໄຄ່ຈາກພຣະເຈົ້າ? ເປັນຫຍັງອຸປະນິໄສຂອງພວກເຈົ້າຈຶ່ງເປັນຕາລັງກຽດຕໍ່ພຣະອົງ? ເປັນຫຍັງຄຳເວົ້າຂອງພວກເຈົ້າຈຶ່ງເຮັດໃຫ້ພຣະອົງກຽດຊັງ? ທັນທີທີ່ພວກເຈົ້າໄດ້ສະແດງຄວາມຈົງຮັກພັກດີອອກໜ້ອຍໜຶ່ງ, ພວກເຈົ້າກໍ່ຮ້ອງເພງສັນລະເສີນ

ຕົນເອງ ແລະ ພວກເຈົ້າຮຽກຮ້ອງຂໍລາງວັນຈາກການປະກອບສ່ວນພຽງເລັກນ້ອຍ; ພວກເຈົ້າດູຖູກຄົນອື່ນໃນເວລາທີ່ພວກເຈົ້າສະແດງຄວາມເຊື່ອຟັງພຽງເລັກນ້ອຍ ແລະ ເລີ່ມດູໝິ່ນພຣະເຈົ້າຫຼັງຈາກໄດ້ສຳເລັດໜ້າທີ່ບາງຢ່າງພຽງເລັກນ້ອຍ. ເພື່ອຮັບເອົາພຣະເຈົ້າ, ເຈົ້າຮ້ອງຂໍເອົາເງິນ, ຂອງຂວັນ ແລະ ຄຳຍ້ອງຍໍ. ມັນເຮັດໃຫ້ເຈົ້າໜັກໃຈໃນການໃຫ້ໜຶ່ງ ຫຼື ສອງຫຼຽນ; ໃນເວລາທີ່ເຈົ້າໃຫ້ສິບຫຼຽນ, ເຈົ້າປາດຖະໜາຢາກໄດ້ພອນ ແລະ ໄດ້ຮັບການປະຕິບັດນຳຢ່າງພິເສດ. ຄວາມເປັນມະນຸດແບບນີ້ຂອງພວກເຈົ້າແມ່ນເປັນໜ້າລັງກຽດທີ່ສຸດທີ່ຈະເວົ້າເຖິງ ຫຼື ຮັບຟັງ. ມີອັນໃດທີ່ສົມຄວນໄດ້ຮັບການສັນລະເສີນໃນຄຳເວົ້າ ແລະ ການກະທຳຂອງພວກເຈົ້າແດ່? ຜູ້ທີ່ເຮັດໜ້າທີ່ຂອງພວກເຂົາ ແລະ ຜູ້ທີ່ບໍ່ເຮັດ; ຜູ້ທີ່ນຳພາ ແລະ ຜູ້ທີ່ປະຕິບັດຕາມ; ຜູ້ທີ່ຮັບເອົາພຣະເຈົ້າ ແລະ ຜູ້ທີ່ບໍ່ຍອມຮັບ; ຜູ້ທີ່ບໍລິຈາກ ແລະ ຜູ້ທີ່ບໍ່ໄດ້ບໍລິຈາກ; ຜູ້ທີ່ເທດສະໜາ ແລະ ຜູ້ທີ່ຮັບເອົາພຣະທຳ ແລະ ອື່ນໆ: ມະນຸດທຸກຄົນທີ່ເປັນແບບນີ້ໄດ້ສັນລະເສີນຕົນເອງ. ພວກເຈົ້າບໍ່ເຫັນວ່າສິ່ງນີ້ເປັນຕາຢາກຫົວບໍ? ໂດຍຮູ້ດີຢູ່ແລ້ວວ່າພວກເຈົ້າເຊື່ອໃນພຣະເຈົ້າ ແຕ່ຢ່າງໃດກໍ່ຕາມ ພວກເຈົ້າບໍ່ສາມາດເຂົ້າກັບພຣະເຈົ້າໄດ້. ໂດຍຮູ້ດີຢູ່ແລ້ວວ່າ ພວກເຈົ້າແມ່ນບໍ່ມີຄວາມດີຄວາມງາມຫຍັງເລີຍ ແຕ່ພວກເຈົ້າກໍ່ຍັງຢາກໂອ້ອວດຄືເກົ່າ. ພວກເຈົ້າບໍ່ຮູ້ສຶກເລີຍບໍວ່າ ຄວາມສຳນຶກຂອງພວກເຈົ້ານັ້ນເສື່ອມໂຊມເຖິງຈຸດທີ່ເຈົ້າບໍ່ສາມາດຄວບຄຸມຕົນເອງໄດ້ແລ້ວ? ດ້ວຍຄວາມສຳນຶກແບບນີ້, ພວກເຈົ້າຈະເໝາະສົມທີ່ຈະພົວພັນກັບພຣະເຈົ້າໄດ້ແນວໃດ? ພວກເຈົ້າບໍ່ຢ້ານຕົນເອງໃນຊ່ວງຫົວລ້ຽວຫົວຕໍ່ນີ້ບໍ? ອຸປະນິໄສຂອງພວກເຈົ້າໄດ້ເສື່ອມໂຊມເຖິງຈຸດທີ່ພວກເຈົ້າບໍ່ສາມາດເຂົ້າກັບພຣະເຈົ້າໄດ້ແລ້ວ. ຖ້າເປັນເຊັ່ນນັ້ນ, ຄວາມເຊື່ອຂອງພວກເຈົ້າກໍ່ບໍ່ເປັນຕາຫົວບໍ? ຄວາມເຊື່ອຂອງພວກເຈົ້າບໍ່ໄດ້ຜິດປົກກະຕິບໍ? ແລ້ວພວກເຈົ້າຈະຈັດການກັບອະນາຄົດຂອງພວກເຈົ້າແນວໃດ? ພວກເຈົ້າຈະເລືອກເສັ້ນທາງໃຫ້ກ້າວຍ່າງແນວໃດ?

# ຫຼາຍຄົນຖືກເອີ້ນ, ແຕ່ໜ້ອຍຄົນທີ່ຖືກເລືອກ

ເຮົາໄດ້ຊອກຫາຫຼາຍຄົນໃນໂລກທີ່ຈະເປັນຜູ້ຕິດຕາມຂອງເຮົາ. ໃນບັນດາຜູ້ຕິດຕາມທຸກຄົນນີ້, ມີຄົນທີ່ຮັບໃຊ້ເປັນນັກບວດ, ຄົນທີ່ນໍາພາ, ຄົນທີ່ເປັນບຸດຂອງພຣະເຈົ້າ, ຄົນທີ່ເປັນຄົນຂອງພຣະເຈົ້າ ແລະ ຄົນທີ່ເຮັດວຽກງານຮັບໃຊ້. ເຮົາໄດ້ຈັດແບ່ງພວກເຂົາອອກເປັນກຸ່ມໂດຍອີງຕາມຄວາມຈົງຮັກພັກດີທີ່ພວກເຂົາສະແດງຕໍ່ເຮົາ. ເມື່ອທຸກຄົນໄດ້ຖືກຈໍາແນກອອກຕາມປະເພດຂອງພວກເຂົາ ນັ້ນກໍ່ຄື ເມື່ອທໍາມະຊາດຂອງຄົນແຕ່ລະປະເພດໄດ້ຖືກເປີດເຜີຍ, ເຮົາຈະຖືເອົາພວກເຂົາແຕ່ລະຄົນຢູ່ທ່າມກາງປະເພດທີ່ຊອບທໍາຂອງພວກເຂົາ ແລະ ຈັດວາງແຕ່ລະປະເພດເຂົ້າໃສ່ບ່ອນທີ່ເໝາະສົມຂອງພວກເຂົາ ເພື່ອບັນລຸເປົ້າໝາຍແຫ່ງຄວາມລອດພົ້ນຂອງເຮົາຕໍ່ມະນຸດຊາດ. ໃນກຸ່ມຕ່າງໆ, ເຮົາເອີ້ນເອົາຄົນທີ່ເຮົາປາຖະໜາຈະຊ່ວຍໃຫ້ເຂົ້າສູ່ເຮືອນຂອງເຮົາ, ແລ້ວຫຼັງຈາກນັ້ນ ເຮົາກໍ່ຈະເຮັດໃຫ້ພວກເຂົາທຸກຄົນຍອມຮັບເອົາພາລະກິດໃນຍຸກສຸດທ້າຍຂອງເຮົາ. ໃນເວລາດຽວກັນນັ້ນ, ເຮົາຈໍາແນກພວກເຂົາຕາມປະເພດ, ແລ້ວໃຫ້ລາງວັນ ຫຼື ລົງໂທດແຕ່ລະຄົນບົນພື້ນຖານການກະທໍາຂອງພວກເຂົາ. ນີ້ຄືຂັ້ນຕອນທີ່ປະກອບເປັນພາລະກິດຂອງເຮົາ.

ມື້ນີ້, ເຮົາດໍາລົງຊີວິດຢູ່ເທິງໂລກ ແລະ ເຮົາດໍາລົງຊີວິດຢູ່ທ່າມກາງມະນຸດ. ຜູ້ຄົນໄດ້ປະສົບກັບພາລະກິດຂອງເຮົາ ແລະ ເຝົ້າເບິ່ງຖ້ອຍຄໍາຂອງເຮົາ ແລະ ພ້ອມກັນນີ້ ເຮົາກໍ່ປະທານຄວາມຈິງທັງໝົດໃຫ້ກັບຜູ້ຕິດຕາມຂອງເຮົາແຕ່ລະຄົນ ເພື່ອທີ່ພວກເຂົາອາດຈະໄດ້ຮັບຊີວິດຈາກເຮົາ ແລະ ຮັບເອົາເສັ້ນທາງທີ່ພວກເຂົາກ້າວເດີນ. ຍ້ອນເຮົາຄືພຣະເຈົ້າ, ຜູ້ໃຫ້ຊີວິດ. ໃນລະຫວ່າງເວລາຫຼາຍປີໃນພາລະກິດຂອງເຮົາ, ຜູ້ຄົນໄດ້ຮັບຫຼາຍຢ່າງ ແລະ ປະຖິ້ມຫຼາຍຢ່າງ, ແຕ່ເຖິງຢ່າງນັ້ນ ເຮົາກໍ່ຍັງເວົ້າໄດ້ວ່າພວກເຂົາບໍ່ເຊື່ອໃນເຮົາຢ່າງແທ້ຈິງ. ຍ້ອນຜູ້ຄົນພຽງແຕ່ຍອມຮັບດ້ວຍປາກຂອງພວກເຂົາວ່າເຮົາເປັນພຣະເຈົ້າ, ແຕ່ພວກເຂົາບໍ່ເຫັນດ້ວຍກັບຄວາມຈິງທີ່ເຮົາເວົ້າ ແລະ ຍິ່ງໄປກວ່ານັ້ນ ພວກເຂົາບໍ່ປະຕິບັດຄວາມຈິງທີ່ເຮົາຮ້ອງຂໍຈາກພວກເຂົາ. ນັ້ນໝາຍຄວາມວ່າ ຜູ້ຄົນຮັບຮູ້ພຽງແຕ່ການເປັນຢູ່ຂອງພຣະເຈົ້າເທົ່ານັ້ນ, ແຕ່ບໍ່ໄດ້ຍອມຮັບດ້ວຍຄວາມຈິງ; ຜູ້ຄົນຍອມຮັບພຽງແຕ່ການເປັນຢູ່ຂອງພຣະເຈົ້າເທົ່ານັ້ນ, ແຕ່ບໍ່ໄດ້ຍອມຮັບຊີວິດ; ຜູ້ຄົນຍອມຮັບພຽງແຕ່ພຣະນາມຂອງພຣະເຈົ້າ, ແຕ່ບໍ່ຍອມຮັບແກ່ນແທ້ຂອງພຣະອົງ. ເຮົາລັງກຽດພວກເຂົາຍ້ອນຄວາມກະຕືລືລົ້ນຂອງພວກເຂົາ, ຍ້ອນພວກເຂົາພຽງແຕ່ໃຊ້ຄໍາເວົ້າທີ່ມ່ວນຫູເພື່ອຫຼອກລວງເຮົາ; ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ນະມັດສະການເຮົາຢ່າງແທ້ຈິງ. ຄໍາເວົ້າຂອງພວກເຈົ້າປະກອບມີການລໍ້ລວງຂອງງູພິດ; ຍິ່ງໄປກວ່ານັ້ນ, ພວກມັນຈອງຫອງຢ່າງສຸດຂີດ, ເປັນຄໍາປະກາດຢ່າງແທ້ຈິງຂອງອັກຄະທູດສະຫວັນ. ຍິ່ງໄປກວ່ານັ້ນ, ການກະທໍາຂອງພວກເຈົ້າຈີກຂາດ ແລະ ແຕກຫັກຈົນເປັນຕາອັບອາຍ; ຄວາມປາດຖະໜາທີ່ເກີນຂອບເຂດ ແລະ ເຈດຕະນາທີ່ໂລບມາກຂອງພວກເຈົ້າເປັນສິ່ງທີ່ບໍ່ເປັນຕາຟັງ. ພວກເຈົ້າທຸກຄົນໄດ້ກາຍເປັນມອດໃນເຮືອນຂອງເຮົາ, ເປັນສິ່ງຂອງທີ່ຈະຖືກກໍາຈັດຖິ້ມພ້ອມກັບຄວາມກຽດຊັງ. ຍ້ອນບໍ່ມີຜູ້ໃດໃນບັນດາພວກເຈົ້າທີ່ຮັກຄວາມຈິງ; ກົງກັນຂ້າມ, ພວກເຈົ້າປາດຖະໜາເພື່ອຮັບພອນ, ເພື່ອຂຶ້ນສູ່ສະຫວັນ, ເພື່ອເບິ່ງນິມິດທີ່

ສະຫງ່າຜ່າເຜີຍຂອງພຣະຄຣິດທີ່ມີສິດອຳນາດຂອງພຣະອົງຢູ່ເທິງແຜ່ນດິນໂລກ. ແຕ່ພວກເຈົ້າເຄີຍຄິດບໍວ່າຄົນແບບພວກເຈົ້າ ເຊິ່ງເປັນຄົນທີ່ເສື່ອມຊາມຢ່າງຮ້າຍແຮງ ແລະ ເປັນຄົນທີ່ບໍ່ຮູ້ຈັກເລີຍວ່າພຣະເຈົ້າຄືຫຍັງ, ສົມຄວນທີ່ຈະຕິດຕາມພຣະເຈົ້າໄດ້ແນວໃດ? ພວກເຈົ້າຈະສາມາດຂຶ້ນສູ່ສະຫວັນໄດ້ຢ່າງໃດ? ເຈົ້າສົມຄວນທີ່ຈະເບິ່ງສາກອັນສະຫງ່າຜ່າເຜີຍແບບນັ້ນ ເຊິ່ງເປັນສາກງົດງາມທີ່ບໍ່ເຄີຍມີມາກ່ອນໄດ້ແນວໃດ? ປາກຂອງພວກເຈົ້າເຕັມໄປດ້ວຍຄຳເວົ້າທີ່ຫຼອກລວງ ແລະ ສົກກະປົກ, ການທໍລະຍົດ ແລະ ຄວາມຍິ່ງຍະໂສ. ພວກເຈົ້າບໍ່ເຄີຍເວົ້າຖ້ອຍຄຳທີ່ຈິງໃຈຕໍ່ເຮົາ, ບໍ່ມີຖ້ອຍຄຳໃດທີ່ບໍລິສຸດ, ບໍ່ມີຖ້ອຍຄຳໃດທີ່ສະແດງເຖິງການຍອມອ່ອນນ້ອມເຮົາເມື່ອຜະເຊີນພຣະທຳຂອງເຮົາ. ໃນທີ່ສຸດແລ້ວ, ຄວາມເຊື່ອຂອງພວກເຈົ້າເປັນແນວໃດແທ້? ຫົວໃຈຂອງພວກເຈົ້າມີພຽງແຕ່ຄວາມປາຖະໜາ ແລະ ເງິນ, ຄວາມຄິດຂອງພວກເຈົ້າມີພຽງແຕ່ວັດຖຸສິ່ງຂອງ. ແຕ່ລະມື້, ພວກເຈົ້າຄິດໄລ່ເບິ່ງວ່າຈະຮັບສິ່ງຕ່າງໆຈາກເຮົາໄດ້ແນວໃດ. ແຕ່ລະມື້, ພວກເຈົ້ານັບເບິ່ງວ່າໄດ້ຮັບຄວາມຮັ່ງມີ ແລະ ວັດຖຸສິ່ງຂອງຈາກເຮົາຫຼາຍປານໃດ. ແຕ່ລະມື້, ເຈົ້າລໍຄອຍໃຫ້ພອນຖອກເທລົງໃສ່ພວກເຈົ້າ ເພື່ອວ່າພວກເຈົ້າອາດມີຄວາມສຸກກັບສິ່ງຕ່າງໆທີ່ອາດເຮັດໃຫ້ມີຄວາມສຸກໃນປະລິມານທີ່ຫຼາຍຂຶ້ນ ແລະ ມາດຕະຖານທີ່ສູງຂຶ້ນ. ສິ່ງທີ່ຢູ່ໃນຄວາມຄິດຂອງພວກເຈົ້າໃນທຸກຊ່ວງເວລານັ້ນບໍ່ແມ່ນເຮົາ ແລະ ບໍ່ແມ່ນຄວາມຈິງທີ່ມາຈາກເຮົາ, ແຕ່ກົງກັນຂ້າມເປັນສາມີ ຫຼື ພັນລະຍາຂອງພວກເຈົ້າ, ລູກຊາຍ, ລູກສາວ ຫຼື ສິ່ງຕ່າງໆທີ່ພວກເຈົ້າກິນ ແລະ ສວມໃສ່. ພວກເຈົ້າຄິດວ່າເຈົ້າຈະສາມາດຮັບເອົາຄວາມສຸກທີ່ຫຼາຍຂຶ້ນ ແລະ ສູງສົ່ງຂຶ້ນໄດ້ແນວໃດ. ແຕ່ເຖິງແມ່ນເມື່ອພວກເຈົ້າຍັດອາຫານໃສ່ທ້ອງຈົນແໜ້ນ, ພວກເຈົ້າກໍ່ບໍ່ໄດ້ເປັນພຽງຊາກສົບບໍ? ເຖິງແມ່ນເມື່ອພວກເຈົ້າຕົບແຕ່ງຕົນເອງດ້ວຍເຄື່ອງອາພອນທີ່ສວຍງາມໃນພາຍນອກ, ພວກເຈົ້າກໍ່ບໍ່ໄດ້ເປັນພຽງຊາກສົບທີ່ຍ່າງໄດ້ແຕ່ບໍ່ມີຊີວິດບໍ? ພວກເຈົ້າເຮັດວຽກຢ່າງໜັກເພື່ອທ້ອງຂອງຕົນຈົນຜົມຂອງພວກເຈົ້າຫງອກ, ເຖິງປານນັ້ນກໍ່ບໍ່ມີພວກເຈົ້າຄົນໃດທີ່ຍອມສະຫຼະແມ່ນແຕ່ຜົມເສັ້ນດຽວເພື່ອພາລະກິດຂອງເຮົາ. ພວກເຈົ້າຫຍຸ້ງວຸ້ນວາຍຢູ່ຕະຫຼອດ, ໃຊ້ຮ່າງກາຍຢ່າງໜັກ ແລະ ທໍລະມານສະໝອງຕົນເອງເພື່ອເຫັນແກ່ເນື້ອໜັງຂອງເຈົ້າເອງ ແລະ ເພື່ອລູກຊາຍ ແລະ ລູກສາວຂອງພວກເຈົ້າ, ແຕ່ເຖິງຢ່າງນັ້ນກໍ່ບໍ່ມີພວກເຈົ້າຄົນໃດທີ່ກັງວົນ ຫຼື ເປັນຫ່ວງຄວາມປະສົງຂອງເຮົາ. ເປັນຫຍັງພວກເຈົ້າຈຶ່ງຍັງຫວັງຈະໄດ້ຮັບສິ່ງຕ່າງໆຈາກເຮົາ?

ເມື່ອເຮົາເຮັດພາລະກິດ, ເຮົາບໍ່ເຄີຍຮີບຮ້ອນ. ບໍ່ວ່າຜູ້ຄົນຈະຕິດຕາມເຮົາແນວໃດກໍ່ຕາມ, ເຮົາເຮັດພາລະກິດຂອງເຮົາຕາມຂັ້ນຕອນແຕ່ລະຂັ້ນ, ຕາມແຜນການຂອງເຮົາ. ສະນັ້ນ, ເຖິງແມ່ນວ່າພວກເຈົ້າທຸກຄົນຈະກະບົດຕໍ່ເຮົາ, ເຮົາກໍ່ຍັງເຮັດພາລະກິດໂດຍບໍ່ຢຸດເຊົາ ແລະ ເຮົາຍັງຄົງສືບຕໍ່ກ່າວພຣະທຳທີ່ເຮົາຕ້ອງກ່າວ. ເຮົາເອີ້ນເອົາຜູ້ຄົນທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າມາສູ່ເຮືອນຂອງເຮົາ ເພື່ອວ່າພວກເຂົາອາດກາຍເປັນຜູ້ຮັບຟັງພຣະທຳຂອງເຮົາ. ເຮົາຈະນຳເອົາທຸກຄົນທີ່ຍອມອ່ອນນ້ອມຕໍ່ພຣະທຳຂອງເຮົາ, ຄົນທີ່ປາຖະໜາຫາພຣະທຳຂອງເຮົາມາຢູ່ຕໍ່ໜ້າບັນລັງຂອງເຮົາ; ທຸກຄົນທີ່ຫັນຫຼັງໃສ່ພຣະທຳຂອງເຮົາ, ຄົນທີ່ບໍ່ເຊື່ອຟັງເຮົາ ແລະ ຄົນທີ່ທ້າທາຍເຮົາຢ່າງເປີດເຜີຍ, ເຮົາຈະໂຍນລົງໄປອີກຂ້າງໜຶ່ງເພື່ອລໍຖ້າຮັບການລົງໂທດຄັ້ງສຸດທ້າຍຂອງພວກເຂົາ. ທຸກຄົນອາໄສຢູ່ທ່າມກາງຄວາມ

ເສື່ອມຊາມ ແລະ ຢູ່ພາຍໃຕ້ມືຂອງສິ່ງຊົ່ວຮ້າຍ ແລະ ດ້ວຍເຫດນັ້ນ ບໍ່ມີຫຼາຍຄົນໃນບັນດາຄົນທີ່ຕິດຕາມເຮົາຈະປາດຖະໜາຫາຄວາມຈິງ. ນັ້ນໝາຍຄວາມວ່າ ຄົນສ່ວນໃຫຍ່ບໍ່ໄດ້ນະມັດສະການເຮົາຢ່າງແທ້ຈິງ; ພວກເຂົາບໍ່ໄດ້ນະມັດສະການເຮົາດ້ວຍຄວາມຈິງ, ແຕ່ພະຍາຍາມຮັບເອົາຄວາມໄວ້ໃຈຂອງເຮົາຜ່ານຄວາມເສື່ອມຊາມ ແລະ ຄວາມກະບົດ, ດ້ວຍວິທີການທີ່ຫຼອກລວງ. ມັນເປັນຍ້ອນເຫດຜົນນີ້ເອງ, ເຮົາຈຶ່ງເວົ້າວ່າ: ຫຼາຍຄົນຖືກເອີ້ນມາ, ແຕ່ໜ້ອຍຄົນທີ່ຈະຖືກເລືອກ. ຄົນທີ່ຖືກເອີ້ນມາແມ່ນເສື່ອມຊາມຢ່າງສຸດໆ ແລະ ລ້ວນແລ້ວແຕ່ຢູ່ໃນຍຸກສະໄໝດຽວກັນ, ແຕ່ຜູ້ຄົນທີ່ຖືກເລືອກເປັນພຽງສ່ວນໜຶ່ງໃນພວກເຂົາ, ພວກເຂົາແມ່ນຄົນທີ່ເຊື່ອ ແລະ ຮັບຮູ້ໃນຄວາມຈິງ ແລະ ເປັນຄົນທີ່ປະຕິບັດຄວາມຈິງ. ຄົນເຫຼົ່ານີ້ເປັນພຽງຄົນສ່ວນໜ້ອຍຈາກກຸ່ມຄົນທັງໝົດ ແລະ ເຮົາຈະໄດ້ຮັບສະຫງ່າລາສີຫຼາຍຂຶ້ນຈາກພວກເຂົາ. ໂດຍວັດແທກຈາກຄຳເວົ້າເຫຼົ່ານີ້, ພວກເຈົ້າຮູ້ບໍວ່າພວກເຈົ້າເປັນຄົນທີ່ໄດ້ຖືກເລືອກ ຫຼື ບໍ່? ຈຸດຈົບຂອງພວກເຈົ້າຈະເປັນແນວໃດ?

ດັ່ງທີ່ເຮົາໄດ້ກ່າວແລ້ວວ່າ ຄົນທີ່ຕິດຕາມເຮົາກໍ່ມີຫຼາຍ ແຕ່ຄົນທີ່ຮັກເຮົາຢ່າງແທ້ຈິງກໍ່ມີໜ້ອຍ. ບາງເທື່ອ ບາງຄົນອາດເວົ້າວ່າ: "ຂ້ານ້ອຍຈຳເປັນຕ້ອງຈ່າຍລາຄາທີ່ຍິ່ງໃຫຍ່ບໍ ຖ້າຂ້ານ້ອຍບໍ່ຮັກພຣະອົງ? ຂ້ານ້ອຍຈະຕິດຕາມມາຮອດຈຸດນີ້ບໍ ຖ້າຂ້ານ້ອຍບໍ່ຮັກພຣະອົງ?" ແນ່ນອນຢູ່ແລ້ວ, ພວກເຈົ້າມີເຫດຜົນຫຼາຍຢ່າງ ແລະ ແນ່ນອນຢູ່ແລ້ວ ຄວາມຮັກຂອງພວກເຈົ້າເປັນສິ່ງທີ່ດີຫຼາຍ, ແຕ່ແມ່ນຫຍັງຄືແກ່ນແທ້ແຫ່ງຄວາມຮັກຂອງພວກເຈົ້າທີ່ມີຕໍ່ເຮົາ? ສິ່ງທີ່ເອີ້ນວ່າ "ຄວາມຮັກ" ແມ່ນໝາຍເຖິງຄວາມຮູ້ສຶກທີ່ບໍລິສຸດ ແລະ ບໍ່ມີຂໍ້ຕຳນິ, ເຊິ່ງພວກເຈົ້າໃຊ້ຫົວໃຈຂອງພວກເຈົ້າເພື່ອຮັກ, ເພື່ອຮູ້ສຶກ ແລະ ເພື່ອຄຸ່ນຄິດ. ໃນຄວາມຮັກແມ່ນບໍ່ມີເງື່ອນໄຂ, ບໍ່ມີອຸປະສັກ ແລະ ບໍ່ມີໄລຍະທາງ. ໃນຄວາມຮັກແມ່ນບໍ່ມີຂໍ້ສົງໄສ, ບໍ່ມີການຫຼອກລວງ ແລະ ບໍ່ມີເລ່ຫຼ່ຽມ. ໃນຄວາມຮັກແມ່ນບໍ່ມີການຄ້າຂາຍ ແລະ ບໍ່ມີສິ່ງທີ່ບໍ່ບໍລິສຸດ. ຖ້າເຈົ້າຮັກ, ແລ້ວເຈົ້າຈະບໍ່ຫຼອກລວງ, ຈົ່ມຕໍ່ວ່າ, ທໍລະຍົດ, ກະບົດ, ບີບບັງຄັບ ຫຼື ສະແຫວງຫາເພື່ອຮັບເອົາບາງສິ່ງບາງຢ່າງ ຫຼື ເພື່ອຮັບເອົາໃນຈຳນວນໃດໜຶ່ງ. ຖ້າເຈົ້າຮັກ, ແລ້ວເຈົ້າກໍ່ຈະອຸທິດຕົນເອງຢ່າງຍິນດີ, ທົນທຸກກັບຄວາມຍາກລຳບາກຢ່າງຍິນດີ, ເຈົ້າຈະສາມາດເຂົ້າກັບເຮົາໄດ້, ເຈົ້າຈະປະຖິ້ມທຸກສິ່ງທີ່ເຈົ້າມີສຳລັບເຮົາ, ເຈົ້າຈະປະຖິ້ມຄອບຄົວຂອງເຈົ້າ, ອະນາຄົດຂອງເຈົ້າ, ໄວໜຸ່ມຂອງເຈົ້າ ແລະ ການແຕ່ງດອງຂອງເຈົ້າ. ຖ້າບໍ່ດັ່ງນັ້ນ, ຄວາມຮັກຂອງເຈົ້າກໍ່ຈະບໍ່ແມ່ນຄວາມຮັກເລີຍ, ແຕ່ເປັນການຫຼອກລວງ ແລະ ການທໍລະຍົດ! ຄວາມຮັກຂອງເຈົ້ານັ້ນເປັນຄວາມຮັກແບບໃດ? ມັນເປັນຄວາມຮັກທີ່ແທ້ຈິງບໍ? ຫຼື ບໍ່ເປັນຈິງ? ເຈົ້າໄດ້ປະຖິ້ມຫຼາຍສໍ່າໃດແລ້ວ? ເຈົ້າໄດ້ຖວາຍຫຼາຍສໍ່າໃດແລ້ວ? ເຮົາໄດ້ຮັບຄວາມຮັກຈາກເຈົ້າຫຼາຍສໍ່າໃດແລ້ວ? ເຈົ້າຮູ້ບໍ? ຫົວໃຈຂອງພວກເຈົ້າເຕັມໄປດ້ວຍສິ່ງຊົ່ວຮ້າຍ, ຄວາມທໍລະຍົດ ແລະ ການຫຼອກລວງ ແລະ ເມື່ອເປັນແນວນັ້ນ, ມີຄວາມຮັກຂອງພວກເຈົ້າຫຼາຍສໍ່າໃດທີ່ບໍ່ບໍລິສຸດ? ພວກເຈົ້າຄິດວ່າ ພວກເຈົ້າໄດ້ຍອມສະຫຼະຢ່າງພຽງພໍໃຫ້ກັບເຮົາແລ້ວ; ພວກເຈົ້າຄິດວ່າ ຄວາມຮັກຂອງພວກເຈົ້າສຳລັບເຮົາກໍ່ພຽງພໍແລ້ວ. ແຕ່ເປັນຫຍັງຄຳເວົ້າ ແລະ ການກະທຳຂອງພວກເຈົ້າຈຶ່ງມີການຕໍ່ຕ້ານ ແລະ ການຫຼອກລວງຢູ່ສະເໝີ? ພວກເຈົ້າຕິດຕາມເຮົາ ແຕ່ບໍ່ຮັບຮູ້ພຣະທຳຂອງເຮົາ. ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຕິດຕາມເຮົາ ແລ້ວກໍ່ປະຖິ້ມເຮົາ.

ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຕິດຕາມເຮົາ, ແຕ່ບໍ່ໄວ້ວາງໃຈເຮົາ. ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຕິດຕາມເຮົາ, ແຕ່ພວກເຈົ້າບໍ່ສາມາດຍອມຮັບການເປັນຢູ່ຂອງເຮົາ. ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຕິດຕາມເຮົາ, ແຕ່ພວກເຈົ້າບໍ່ໄດ້ປະຕິບັດຢ່າງເໝາະສົມກັບຜູ້ທີ່ເຮົາເປັນເຮົາ ແລະ ພວກເຈົ້າສ້າງຄວາມລຳບາກໃຫ້ເຮົາທຸກຄັ້ງ. ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຕິດຕາມເຮົາ, ແຕ່ພວກເຈົ້າພະຍາຍາມຕົວະ ແລະ ຫຼອກລວງເຮົາໃນທຸກໆເລື່ອງ. ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຮັບໃຊ້ເຮົາ, ແຕ່ພວກເຈົ້າບໍ່ຢຳເກງເຮົາ. ສິ່ງນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າຕໍ່ຕ້ານເຮົາໃນທຸກໆເລື່ອງ ແລະ ທຸກໆສິ່ງ. ທັງໝົດນີ້ແມ່ນເອີ້ນວ່າຄວາມຮັກບໍ? ພວກເຈົ້າໄດ້ອຸທິດຫຼາຍຢ່າງ, ມັນເປັນຄວາມຈິງ ແຕ່ພວກເຈົ້າບໍ່ໄດ້ປະຕິບັດສິ່ງທີ່ເຮົາຕ້ອງການຈາກພວກເຈົ້າເລີຍ. ສິ່ງນີ້ຈະສາມາດເອີ້ນວ່າຄວາມຮັກໄດ້ບໍ? ເມື່ອພິຈາລະນາຢ່າງຖີ່ຖ້ວນແລ້ວ, ມັນກໍ່ສະແດງໃຫ້ເຫັນວ່າບໍ່ມີຄວາມຮັກແມ່ນແຕ່ເສດສ່ວນດຽວສຳລັບເຮົາພາຍໃນຕົວພວກເຈົ້າ. ຫຼັງຈາກທີ່ໄດ້ເຮັດພາລະກິດມາເປັນເວລາຫຼາຍປີ ແລະ ພຣະທຳທັງໝົດທີ່ເຮົາໄດ້ສະໜອງໃຫ້, ພວກເຈົ້າໄດ້ຮັບຫຼາຍສໍ່າໃດແທ້ໆ? ສິ່ງນີ້ບໍ່ຄຸ້ມຄ່າໃຫ້ພວກເຈົ້າກັບໄປທົບທວນເບິ່ງບໍ? ເຮົາຂໍເຕືອນພວກເຈົ້າວ່າ: ຄົນທີ່ເຮົາເອີ້ນມາຫາເຮົາບໍ່ແມ່ນຄົນທີ່ບໍ່ເຄີຍເສື່ອມຊາມ; ໃນທາງກັບກັນ, ຄົນທີ່ເຮົາເລືອກແມ່ນຜູ້ທີ່ຮັກເຮົາຢ່າງແທ້ຈິງ. ສະນັ້ນ, ພວກເຈົ້າຕ້ອງລະມັດລະວັງໃນຄຳເວົ້າ ແລະ ການກະທຳຂອງພວກເຈົ້າ ແລະ ໃຫ້ກວດສອບເບິ່ງເຈດຈຳນົງ ແລະ ຄວາມຄິດຂອງພວກເຈົ້າເພື່ອວ່າພວກມັນຈະບໍ່ລໍ້າເສັ້ນ. ໃນເວລາຂອງຍຸກສຸດທ້າຍ, ໃຫ້ມອບຄວາມຮັກຂອງພວກເຈົ້າຕໍ່ໜ້າເຮົາໃຫ້ຫຼາຍທີ່ສຸດ, ຖ້າບໍ່ດັ່ງນັ້ນ ຄວາມໂກດຮ້າຍຂອງເຮົາຈະບໍ່ອອກໄປຈາກພວກເຈົ້າຈັກເທື່ອ!

# ເຈົ້າຄວນສະແຫວງຫາ ຫົນທາງທີ່ຈະເຂົ້າກັບພຣະຄຣິດ

ເຮົາໄດ້ປະຕິບັດພາລະກິດຫຼາຍຢ່າງທ່າມກາງມະນຸດ ເຊິ່ງໃນລະຫວ່າງນັ້ນ ເຮົາໄດ້ກ່າວພຣະທຳຫຼາຍຂໍ້. ພຣະທຳເຫຼົ່ານີ້ແມ່ນເພັນແກ່ຄວາມລອດພົ້ນຂອງມະນຸດ ແລະ ຖືກກ່າວອອກເພື່ອໃຫ້ມະນຸດເຂົ້າກັບເຮົາໄດ້. ເຖິງຢ່າງໃດກໍ່ຕາມ, ເຮົາໄດ້ຮັບພຽງສອງສາມຄົນຢູ່ເທິງໂລກ ເຊິ່ງເປັນຄົນທີ່ສາມາດເຂົ້າກັບເຮົາໄດ້ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ມະນຸດບໍ່ເຊີດຊູພຣະທຳຂອງເຮົາ, ມັນເປັນຍ້ອນມະນຸດບໍ່ສາມາດເຂົ້າກັບເຮົາໄດ້. ໃນລັກສະນະນີ້ ພາລະກິດທີ່ເຮົາປະຕິບັດບໍ່ແມ່ນພຽງແຕ່ເພື່ອໃຫ້ມະນຸດສາມາດນະມັດສະການເຮົາ; ສິ່ງທີ່ສຳຄັນໄປກວ່ານັ້ນກໍ່ຄືເພື່ອໃຫ້ມະນຸດສາມາດເຂົ້າກັບເຮົາໄດ້. ມະນຸດຖືກເຮັດໃຫ້ເສື່ອມໂຊມ ແລະ ດຳລົງຊີວິດຢູ່ໃນກັບດັກຂອງຊາຕານ. ທຸກຄົນດຳລົງຊີວິດໃນເນື້ອໜັງ, ດຳລົງຊີວິດໃນຄວາມປາຖະໜາທີ່ເຫັນແກ່ຕົວ ແລະ ບໍ່ມີແມ່ນແຕ່ຄົນດຽວທີ່ສາມາດເຂົ້າກັບເຮົາໄດ້. ມີຄົນທີ່ເວົ້າວ່າ ພວກເຂົາສາມາດເຂົ້າກັບເຮົາໄດ້ ແຕ່ທຸກຄົນເຫຼົ່ານັ້ນນະມັດສະການພະທຽມທີ່ເລື່ອນລອຍ. ເຖິງແມ່ນວ່າພວກເຂົາຮັບຮູ້ວ່ານາມຂອງເຮົາບໍລິສຸດ, ພວກເຂົາກໍ່ຍັງຍ່າງຕາມເສັ້ນທາງທີ່ຢູ່ກົງກັນຂ້າມກັບເຮົາ ແລະ ຄຳເວົ້າຂອງພວກເຂົາກໍ່ເຕັມໄປດ້ວຍຄວາມອວດດີ ແລະ ຄວາມໝັ້ນໃຈໃນຕົນເອງ. ນີ້ກໍ່ຍ້ອນວ່າ ໃນສ່ວນເລິກແລ້ວ ພວກເຂົາທຸກຄົນຕໍ່ຕ້ານເຮົາ ແລະ ບໍ່ສາມາດເຂົ້າກັບເຮົາໄດ້. ໃນແຕ່ລະມື້ ພວກເຂົາສະແຫວງຫາຮ່ອງຮອຍຂອງເຮົາຢູ່ໃນພຣະຄຳພີ ແລະ ສຸ່ມຊອກຫາຂໍ້ຄວາມທີ່ "ເໝາະສົມ" ເຊິ່ງພວກເຂົາກັນອ່ານ ແລະ ທ່ອງຂໍ້ຄວາມພຣະຄຳເຫຼົ່ານັ້ນໂດຍບໍ່ຢຸດເຊົາ. ພວກເຂົາບໍ່ຮູ້ຈັກເລີຍວ່າຈະສາມາດເຂົ້າກັບເຮົາໄດ້ແນວໃດ ຫຼື ການຕໍ່ຕ້ານເຮົາໝາຍຄວາມວ່າແນວໃດ. ພວກເຂົາພຽງແຕ່ອ່ານຂໍ້ພຣະຄຳຢ່າງຫຼັບຫູຫຼັບຕາ. ພາຍໃນພຣະຄຳພີ, ພວກເຂົາຈຳກັດພຣະເຈົ້າທີ່ເລື່ອນລອຍທີ່ພວກເຂົາບໍ່ເຄີຍເຫັນຈັກເທື່ອ ແລະ ບໍ່ສາມາດເຫັນໄດ້ ແລະ ເອົາອອກມາເບິ່ງໄດ້ໃນເວລາຫວ່າງ. ພວກເຂົາເຊື່ອໃນການເປັນຢູ່ຂອງເຮົາພຽງແຕ່ພາຍໃນຂອບເຂດພຣະຄຳພີເທົ່ານັ້ນ ແລະ ພວກເຂົາທຽບເຮົາໂດຍເທົ່າກັບພຣະຄຳພີ; ຖ້າປາສະຈາກພຣະຄຳພີ, ມັນກໍ່ຈະບໍ່ມີເຮົາ ແລະ ຖ້າປາສະຈາກເຮົາກໍ່ບໍ່ມີພຣະຄຳພີ. ພວກເຂົາບໍ່ສົນໃຈກັບການເປັນຢູ່ ຫຼື ການກະທຳຂອງເຮົາ, ແຕ່ກົງກັນຂ້າມ ພວກເຂົາອຸທິດຕົນ ແລະ ໃສ່ໃຈເປັນພິເສດຫຼາຍກັບທຸກຂໍ້ຄວາມໃນພຣະຄຳພີ. ພວກເຂົາທຸກຄົນເຖິງກັບເຊື່ອວ່າເຮົາບໍ່ຄວນເຮັດໃນສິ່ງທີ່ເຮົາປາດຖະໜາຢາກເຮັດ ນອກຈາກມັນຈະຖືກທຳນາຍໄວ້ລ່ວງໜ້າໃນຂໍ້ພຣະຄຳພ. ພວກເຂົາໃຫ້ຄວາມສຳຄັນກັບຂໍ້ຄວາມພຣະຄຳຫຼາຍເກີນໄປ. ມັນສາມາດເວົ້າໄດ້ວ່າພວກເຂົາເຫັນພຣະທຳ ແລະ ການສະແດງອອກເປັນສິ່ງສຳຄັນເກີນໄປ ຈົນເຖິງຂອບເຂດທີ່ພວກເຂົາໃຊ້ຂໍ້ພຣະຄຳເພື່ອວັດແທກພຣະທຳທຸກຂໍ້ທີ່ເຮົາເວົ້າ ແລະ ຕຳນິເຮົາ. ສິ່ງທີ່ພວກເຂົາສະແຫວງຫາບໍ່ແມ່ນຫົນທາງທີ່ຈະເຂົ້າກັບເຮົາ ຫຼື ຫົນທາງທີ່ສາມາດເຂົ້າກັບຄວາມຈິງໄດ້, ແຕ່ເປັນຫົນທາງທີ່ສາມາດເຂົ້າກັບພຣະທຳໃນພຣະຄຳພີ ແລະ ພວກເຂົາເຊື່ອວ່າ ສິ່ງໃດກໍ່ຕາມທີ່ບໍ່ສອດຄ່ອງກັບພຣະຄຳພີກໍ່ບໍ່ແມ່ນພາລະກິດຂອງເຮົາ, ບໍ່ຍົກເວັ້ນແມ່ນແຕ່ພາລະກິດຂອງເຮົາ. ຄົນເຫຼົ່ານີ້ບໍ່ແມ່ນເຊື້ອສາຍທີ່ເຮັດ

ຕາມພວກຟາຣີຊາຍບໍ? ພວກຟາຣີຊາຍທີ່ເປັນຊາວຢິວໃຊ້ກົດບັນຍັດຂອງໂມເຊເພື່ອກ່າວໂທດພຣະເຢຊູ. ພວກເຂົາບໍ່ສະແຫວງຫາຫົນທາງທີ່ຈະເຂົ້າກັບພຣະເຢຊູໃນເວລານັ້ນ, ແຕ່ພາກັນປະຕິບັດຕາມກົດບັນຍັດ, ປະຕິບັດຕາມຕົວອັກສອນຢ່າງເຂັ້ມງວດ ຈົນເຖິງຂັ້ນທີ່ກ່າວຫາວ່າພຣະອົງບໍ່ປະຕິບັດຕາມກົດບັນຍັດໃນພັນທະສັນຍາເດີມ ແລະ ບໍ່ແມ່ນພຣະເມຊີອາ ແລ້ວໃນທີ່ສຸດ ພວກເຂົາກໍ່ຄຶງພຣະເຢຊູທີ່ໄຮ້ດຽງສາເທິງໄມ້ກາງແຂນ. ທາດແທ້ຂອງພວກເຂົາແມ່ນຫຍັງ? ມັນບໍ່ແມ່ນຍ້ອນພວກເຂົາບໍ່ໄດ້ສະແຫວງຫາຫົນທາງເພື່ອເຂົ້າກັບຄວາມຈິງບໍ? ພວກເຂົາຫຼົງໄຫຼກັບພຣະທຳທຸກຂໍ້ໃນພຣະຄຳພີ ໃນຂະນະທີ່ບໍ່ສົນໃຈຕໍ່ຄວາມປະສົງຂອງເຮົາ ຫຼື ຂັ້ນຕອນ ແລະ ວິທີການໃນພາລະກິດຂອງເຮົາ. ພວກເຂົາບໍ່ແມ່ນຄົນທີ່ສະແຫວງຫາຄວາມຈິງ, ແຕ່ເປັນຄົນທີ່ຍຶດຕິດກັບພຣະທຳຢ່າງເຂັ້ມງວດ; ພວກເຂົາບໍ່ແມ່ນຄົນທີ່ເຊື່ອໃນພຣະເຈົ້າ, ແຕ່ເປັນຄົນທີ່ເຊື່ອໃນພຣະຄຳພີ. ໂດຍແທ້ຈິງແລ້ວ, ພວກເຂົາເປັນໝາເຝົ້າພຣະຄຳພີ. ເພື່ອຄຸ້ມຄອງຜົນປະໂຫຍດຂອງພຣະຄຳພີ, ເພື່ອເຊີດຊູສັກສີຂອງພຣະຄຳພີ ແລະ ເພື່ອປົກປ້ອງຊື່ສຽງຂອງພຣະຄຳພີ, ພວກເຂົາເຮັດຈົນເຖິງຂັ້ນທີ່ຄຶງພຣະເຢຊູຜູ້ເຕັມໄປດ້ວຍຄວາມເມດຕາໃສ່ໄມ້ກາງແຂນ. ພວກເຂົາເຮັດສິ່ງນີ້ພຽງແຕ່ເພື່ອເຫັນແກ່ການປົກປ້ອງພຣະຄຳພີ ແລະ ເພື່ອເຫັນແກ່ການຮັກສາສະຖານະຂອງພຣະທຳທຸກຂໍ້ໃນພຣະຄຳພີໄວ້ໃນຫົວໃຈຂອງມະນຸດເທົ່ານັ້ນ. ດັ່ງນັ້ນ ພວກເຂົາຈຶ່ງເລືອກທີ່ຈະປະຖິ້ມອະນາຄົດຂອງພວກເຂົາ ແລະ ເຄື່ອງບູຊາແທນຄວາມຜິດບາບເພື່ອກ່າວລົງໂທດພຣະເຢຊູຜູ້ທີ່ບໍ່ສອດຄ່ອງກັບຫຼັກຄຳສອນໃນພຣະຄຳພີຈົນຕາຍ. ພວກເຂົາບໍ່ແມ່ນລູກນ້ອງຂອງພຣະທຳທຸກໆຂໍ້ໃນພຣະຄຳພີບໍ?

ແລ້ວຄົນໃນປັດຈຸບັນນີ້ເດ? ພຣະຄຣິດໄດ້ລົງມາເພື່ອເປີດເຜີຍຄວາມຈິງ, ແຕ່ພວກເຂົາເລືອກທີ່ຈະຂັບໄລ່ພຣະອົງໃຫ້ອອກຈາກໂລກນີ້ ເພື່ອວ່າພວກເຂົາອາດໄດ້ຮັບສິດເຂົ້າສູ່ສະຫວັນ ແລະ ເພື່ອຮັບພຣະຄຸນ. ພວກເຂົາເລືອກທີ່ຈະປະຕິເສດການມາເຖິງຂອງຄວາມຈິງຢ່າງສົມບູນເພື່ອຮັກສາຜົນປະໂຫຍດຂອງພຣະຄຳພີ ແລະ ພວກເຂົາເລືອກທີ່ຈະຄຶງພຣະຄຣິດຜູ້ທີ່ກັບມາເປັນເນື້ອໜັງເທິງໄມ້ກາງແຂນອີກຄັ້ງ ເພື່ອຮັບຮອງການເປັນຢູ່ຊົ່ວນິດນິລັນຂອງພຣະຄຳພີ. ມະນຸດຈະສາມາດໄດ້ຮັບຄວາມລອດພົ້ນຂອງເຮົາໄດ້ແນວໃດ ເມື່ອຫົວໃຈຂອງເຂົາຊົ່ວຮ້າຍແບບນີ້ ແລະ ທຳມະຊາດຂອງເຂົາຕໍ່ຕ້ານເຮົາເຊັ່ນນີ້? ເຮົາອາໄສຢູ່ທ່າມກາງມະນຸດ, ແຕ່ມະນຸດບໍ່ຮູ້ເຖິງການເປັນຢູ່ຂອງເຮົາ. ເມື່ອເຮົາສ່ອງແສງສະຫວ່າງມາໃສ່ມະນຸດ, ເຂົາກໍ່ຍັງຄົງບໍ່ຮູ້ກ່ຽວກັບການເປັນຢູ່ຂອງເຮົາ. ເມື່ອເຮົາປ່ອຍຄວາມໂກດຮ້າຍຂອງເຮົາໃສ່ມະນຸດ, ເຂົາກໍ່ປະຕິເສດການເປັນຢູ່ຂອງເຮົາດ້ວຍກຳລັງທີ່ຫຼາຍກວ່າເດີມອີກ. ມະນຸດຄົ້ນຫາເພື່ອທີ່ຈະສາມາດເຂົ້າກັບພຣະທຳ ແລະ ເຂົ້າກັບພຣະຄຳພີ, ແຕ່ບໍ່ມີມະນຸດຄົນໃດມາຢູ່ຕໍ່ໜ້າເຮົາເພື່ອສະແຫວງຫາຄວາມສາມາດໃນການເຂົ້າກັບຄວາມຈິງ. ມະນຸດຫຼຽວເບິ່ງເຮົາທີ່ຢູ່ໃນສະຫວັນ ແລະ ມີຄວາມກັງວົນເປັນພິເສດຕໍ່ການເປັນຢູ່ຂອງເຮົາໃນສະຫວັນ, ແຕ່ບໍ່ມີຜູ້ໃດສົນໃຈເຮົາ ຜູ້ທີ່ຢູ່ໃນເນື້ອໜັງຍ້ອນວ່າເຮົາຜູ້ທີ່ອາໄສຢູ່ທ່າມກາງມະນຸດເປັນສິ່ງທີ່ບໍ່ສຳຄັນເກີນໄປ. ຄົນທີ່ພຽງແຕ່ສະແຫວງຫາເພື່ອເຂົ້າກັບພຣະທຳໃນພຣະຄຳພີ ແລະ ຄົນທີ່ພຽງແຕ່ສະແຫວງຫາເພື່ອເຂົ້າກັບພຣະເຈົ້າທີ່ເລື່ອນລອຍກໍ່ເປັນພາບທີ່ໜ້າສົມເພດຕໍ່ເຮົາ. ນັ້ນກໍ່ຍ້ອນວ່າ ສິ່ງທີ່ພວກເຂົານະມັດສະການແມ່ນພຣະທຳທີ່ຕາຍແລ້ວ

ແລະ ເປັນພຽງພຣະເຈົ້າທີ່ສາມາດມອບຊັບສິນບັດທີ່ນັບບໍ່ຖ້ວນໃຫ້ກັບພວກເຂົາເທົ່ານັ້ນ; ສິ່ງທີ່ພວກເຂົານະມັດສະການແມ່ນພຣະເຈົ້າທີ່ວາງຕົນເອງຢູ່ໃນຄວາມເມດຕາຂອງມະນຸດ ເຊິ່ງເປັນພຣະເຈົ້າບໍ່ມີຕົວຕົນຢູ່ຈິງ. ແລ້ວມະນຸດແບບນັ້ນຈະສາມາດຮັບຫຍັງໄດ້ແດ່ຈາກເຮົາ? ມະນຸດຕ້ອຍຕໍ່າເກີນໄປສຳລັບພຣະທຳ. ຄົນທີ່ຕໍ່ຕ້ານເຮົາ, ຄົນທີ່ມີແຕ່ຮຽກຮ້ອງຢ່າງບໍ່ມີຂີດຈຳກັດ, ຄົນທີ່ບໍ່ມີຄວາມຮັກສຳລັບຄວາມຈິງ, ຄົນທີ່ກະບົດຕໍ່ເຮົາ, ພວກເຂົາຈະສາມາດເຂົ້າກັບເຮົາໄດ້ແນວໃດ?

ຄົນທີ່ຕໍ່ຕ້ານເຮົາແມ່ນຄົນທີ່ບໍ່ສາມາດເຂົ້າກັນກັບເຮົາໄດ້. ຄົນທີ່ບໍ່ຮັກຄວາມຈິງກໍ່ເປັນເຊັ່ນດຽວກັນ. ຄົນທີ່ກະບົດຕໍ່ເຮົາແຮງຕໍ່ຕ້ານເຮົາຫຼາຍຂຶ້ນ ແລະ ບໍ່ສາມາດເຂົ້າກັບເຮົາໄດ້. ເຮົາສົ່ງມອບທຸກຄົນທີ່ບໍ່ສາມາດເຂົ້າກັບເຮົາໄດ້ໃຫ້ແກ່ສິ່ງຊົ່ວຮ້າຍ ແລະ ເຮົາຈະປ່ອຍໃຫ້ພວກເຂົາຢູ່ໃນຄວາມເສື່ອມຊາມຂອງຄົນຊົ່ວຮ້າຍ, ມອບອິດສະຫຼະໃຫ້ພວກເຂົາເພື່ອເປີດເຜີຍຄວາມຊົ່ວຮ້າຍຂອງພວກເຂົາ ແລະ ໃນທີ່ສຸດກໍ່ຈະປ່ອຍໃຫ້ສິ່ງຊົ່ວຮ້າຍທັງຫຼາຍນັ້ນກືນກິນພວກເຂົາ. ເຮົາບໍ່ສົນໃຈວ່າມີເທົ່າໃດຄົນທີ່ນະມັດສະການເຮົາ ເຊິ່ງເວົ້າໄດ້ວ່າ ເຮົາບໍ່ສົນໃຈວ່າມີເທົ່າໃດຄົນທີ່ເຊື່ອໃນຕົວເຮົາ. ສິ່ງທີ່ເຮົາສົນໃຈກໍ່ຄືມີເທົ່າໃດຄົນທີ່ຈະສາມາດເຂົ້າກັບເຮົາໄດ້. ນັ້ນກໍ່ຍ້ອນວ່າ ທຸກຄົນທີ່ບໍ່ສາມາດເຂົ້າກັບເຮົາໄດ້ແມ່ນຄົນຊົ່ວຮ້າຍທີ່ທັກທຽງເຮົາ; ພວກເຂົາຄືສັດຕູຂອງເຮົາ ແລະ ເຮົາຈະບໍ່ "ຕັ້ງສານບູຊາ" ໃຫ້ກັບສັດຕູຂອງເຮົາໃນເຮືອນຂອງເຮົາ. ຄົນທີ່ສາມາດເຂົ້າກັບເຮົາໄດ້ຈະຮັບໃຊ້ເຮົາໃນເຮືອນຂອງເຮົາຕະຫຼອດໄປ ແລະ ຄົນທີ່ວາງຕົນເປັນສັດຕູກັບເຮົາຈະຮັບການລົງໂທດຈາກເຮົາຕະຫຼອດໄປ. ຄົນທີ່ພຽງແຕ່ສົນໃຈພຣະທຳໃນພຣະຄຳພີ ແລະ ບໍ່ສົນໃຈກັບຄວາມຈິງ ຫຼື ສະແຫວງຫາບາດກ້າວຂອງເຮົາ, ພວກເຂົາຕໍ່ຕ້ານເຮົາຍ້ອນພວກເຂົາຈຳກັດເຮົາຕາມພຣະຄຳພີ ແລະ ຈຳກັດເຮົາໃຫ້ຢູ່ໃນພຣະຄຳພີເທົ່ານັ້ນ ແລະ ດ້ວຍເຫດນີ້ພວກເຂົາຈຶ່ງໝິ່ນປະໝາດເຮົາຢ່າງສຸດຂີດ. ຄົນເຫຼົ່ານັ້ນຈະສາມາດມາຢູ່ຕໍ່ໜ້າເຮົາໄດ້ແນວໃດ? ພວກເຂົາບໍ່ສົນໃຈຕໍ່ການກະທຳຂອງເຮົາ ຫຼື ຄວາມປະສົງຂອງເຮົາ ຫຼື ຄວາມຈິງ, ແຕ່ກົງກັນຂ້າມ ພວກເຂົາຫຼົງໄຫຼໃນພຣະທຳ, ເຊິ່ງເປັນພຣະຄຳທີ່ຈະຂ້າ. ຄົນເຫຼົ່ານັ້ນຈະສາມາດເຂົ້າກັບເຮົາໄດ້ແນວໃດ?

ເຮົາໄດ້ກ່າວພຣະທຳຫຼາຍຂໍ້ ແລະ ຍັງໄດ້ສະແດງຄວາມປະສົງ ແລະ ອຸປະນິໄສຂອງເຮົາ, ແຕ່ເຖິງຢ່າງນັ້ນ ຄົນກໍຍັງບໍ່ສາມາດຮູ້ຈັກເຮົາ ແລະ ເຊື່ອໃນເຮົາ ຫຼື ມັນສາມາດເວົ້າໄດ້ວ່າ ພວກເຂົາຍັງບໍ່ສາມາດເຊື່ອຟັງເຮົາໄດ້. ຄົນທີ່ອາໄສໃນພຣະຄຳພີ, ຄົນທີ່ອາໄສພາຍໃນພຣະບັນຍັດ, ຄົນທີ່ອາໄສຢູ່ເທິງໄມ້ກາງແຂນ, ຄົນທີ່ອາໄສຕາມຫຼັກຄຳສອນ, ຄົນທີ່ອາໄສທ່າມກາງພາລະກິດທີ່ເຮົາປະຕິບັດໃນປັດຈຸບັນ ນັ້ນກໍ່ຄື ຜູ້ໃດໃນບັນດາພວກເຂົາເຫຼົ່ານັ້ນທີ່ສາມາດເຂົ້າກັບເຮົາໄດ້? ພວກເຈົ້າພຽງແຕ່ຄິດເຖິງການຮັບພອນ ແລະ ລາງວັນ, ແຕ່ບໍ່ເຄີຍຄິດຫາວິທີທີ່ຈະສາມາດເຂົ້າກັບເຮົາໄດ້ແທ້ໆ ຫຼື ວິທີທີ່ປ້ອງກັນຕົນເອງບໍ່ໃຫ້ຕໍ່ຕ້ານເຮົາ. ເຮົາຜິດຫວັງຫຼາຍໃນຕົວພວກເຈົ້າ ຍ້ອນເຮົາໄດ້ມອບຫຼາຍສິ່ງຫຼາຍຢ່າງໃຫ້ກັບພວກເຈົ້າ ແຕ່ເຮົາໄດ້ຮັບໜ້ອຍດຽວຈາກພວກເຈົ້າ. ການຫຼອກລວງຂອງພວກເຈົ້າ, ຄວາມອວດດີຂອງພວກເຈົ້າ, ຄວາມເຫັນແກ່ໄດ້ຂອງພວກເຈົ້າ, ຄວາມຕ້ອງການທີ່ເກີນຂອບເຂດຂອງພວກເຈົ້າ, ການທໍລະຍົດຂອງພວກເຈົ້າ, ຄວາມບໍ່ເຊື່ອຟັງຂອງພວກເຈົ້າ, ສິ່ງໃດໃນບັນດາສິ່ງເຫຼົ່ານີ້ທີ່ສາມາດຫຼົບໜີຈາກສາຍຕາຂອງເຮົາໄດ້? ພວກເຈົ້າປະໝາດກັບເຮົາ, ພວກເຈົ້າຫຼອກລວງເຮົາ,

ພວກເຈົ້າດູຖູກເຮົາ, ພວກເຈົ້າໂນ້ມນ້າວເຮົາ, ພວກເຈົ້າບີບບັງຄັບເຮົາ ແລະ ຂູ່ເຂັນເຮົາໃຫ້ເສຍສະຫຼະ, ຄວາມຊົ່ວຮ້າຍດັ່ງກ່າວຈະສາມາດໜີພົ້ນຈາກການລົງໂທດຂອງເຮົາໄດ້ແນວໃດ? ການກະທຳຢ່າງຊົ່ວຮ້າຍຂອງພວກເຈົ້າເປັນຫຼັກຖານພິສູດວ່າພວກເຈົ້າຕໍ່ຕ້ານເຮົາ ແລະ ເປັນຫຼັກຖານພິສູດວ່າພວກເຈົ້າບໍ່ສາມາດເຂົ້າກັບເຮົາໄດ້. ພວກເຈົ້າແຕ່ລະຄົນເຊື່ອວ່າຕົນເອງສາມາດເຂົ້າກັບເຮົາໄດ້, ຖ້າເປັນແບບນັ້ນ ແລ້ວຫຼັກຖານທີ່ບໍ່ສາມາດປະຕິເສດໄດ້ນີ້ໝາຍເຖິງໃຜ? ພວກເຈົ້າເຊື່ອວ່າຕົນເອງມີຄວາມຈິງໃຈ ແລະ ຄວາມຈົງຮັກພັກດີຕໍ່ເຮົາຫຼາຍທີ່ສຸດ. ພວກເຈົ້າຄິດວ່າ ພວກເຈົ້າໃຈດີຫຼາຍ, ມີຄວາມເຫັນອົກເຫັນໃຈຫຼາຍ ແລະ ໄດ້ອຸທິດຫຼາຍສິ່ງຫຼາຍຢ່າງໃຫ້ກັບເຮົາ. ພວກເຈົ້າຄິດວ່າພວກເຈົ້າໄດ້ເຮັດຫຼາຍກວ່າທີ່ຈຳເປັນສຳລັບເຮົາ. ແຕ່ພວກເຈົ້າເຄີຍປຽບທຽບສິ່ງນີ້ກັບການປະພຶດຂອງພວກເຈົ້າເອງບໍ? ເຮົາຂໍບອກວ່າພວກເຈົ້າເປັນຄົນທີ່ອວດດີຫຼາຍ, ເຫັນແກ່ໄດ້ຫຼາຍ ແລະ ເຮັດພໍເປັນພິທີຫຼາຍ; ກົນອຸບາຍທີ່ພວກເຈົ້າໃຊ້ເພື່ອຫຼອກລວງເຮົາແມ່ນສະຫຼາດຫຼາຍ ແລະ ພວກເຈົ້າມີເຈດຕະນາທີ່ຕໍ່າຊ້າ ແລະ ວິທີການທີ່ເປັນຕາດູຖູກຫຼາຍ. ຄວາມຈົງຮັກພັກດີຂອງພວກເຈົ້າກໍ່ມີໜ້ອຍ, ຄວາມຈິງຈັງຂອງພວກເຈົ້າກໍ່ມີເລັກໆນ້ອຍໆ ແລະ ຈິດສຳນຶກຂອງພວກເຈົ້າກໍ່ຍິ່ງຂາດເຂີນ. ໃນຫົວໃຈຂອງພວກເຈົ້າແມ່ນມີແຕ່ຄວາມຄິດຊົ່ວ ແລະ ບໍ່ມີໃຜທີ່ຈະໄດ້ຮັບການລະເວັ້ນຈາກຄວາມຊົ່ວຂອງເຈົ້າ, ແມ່ນແຕ່ເຮົາກໍ່ບໍ່ລະເວັ້ນ. ພວກເຈົ້າຕັດເຮົາອອກຍ້ອນເຫັນແກ່ລູກຂອງພວກເຈົ້າ ຫຼື ສາມີຂອງພວກເຈົ້າ ຫຼື ການຮັກສາຕົວພວກເຈົ້າເອງ. ແທນທີ່ຈະສົນໃຈກ່ຽວກັບເຮົາ, ພວກເຈົ້າສົນໃຈຄອບຄົວຂອງພວກເຈົ້າ, ລູກຂອງພວກເຈົ້າ, ສະຖານະຂອງພວກເຈົ້າ, ອະນາຄົດຂອງພວກເຈົ້າ ແລະ ຄວາມພໍໃຈໃນຕົວພວກເຈົ້າເອງ. ມີຕອນໃດແດ່ທີ່ພວກເຈົ້າເຄີຍຄິດເຖິງເຮົາເມື່ອພວກເຈົ້າກ່າວ ຫຼື ກະທຳ? ໃນມື້ທີ່ອາກາດເຢັນ, ພວກເຈົ້າກໍ່ຄິດຫາລູກຂອງພວກເຈົ້າ, ສາມີຂອງພວກເຈົ້າ, ພັນລະຍາຂອງພວກເຈົ້າ ຫຼື ພໍ່ແມ່ຂອງພວກເຈົ້າ. ໃນມື້ທີ່ອາກາດຮ້ອນ, ເຮົາບໍ່ມີພື້ນທີ່ຢູ່ໃນຄວາມຄິດຂອງພວກເຈົ້າເລີຍ. ເມື່ອພວກເຈົ້າປະຕິບັດໜ້າທີ່ຂອງເຈົ້າ, ພວກເຈົ້າກໍ່ຄິດເຖິງແຕ່ຜົນປະໂຫຍດຂອງຕົນເອງ, ເຖິງຄວາມປອດໄພຂອງຕົນເອງ, ຄິດເຖິງສະມາຊິກໃນຄອບຄົວຂອງເຈົ້າເອງ. ເຈົ້າເຄີຍເຮັດຫຍັງແດ່ເພື່ອເຮົາ? ເຈົ້າຄິດຫາເຮົາໃນເມື່ອໃດແດ່? ມີຕອນໃດແດ່ທີ່ເຈົ້າອຸທິດທຸກຢ່າງຂອງຕົນເອງໃຫ້ກັບເຮົາ ແລະ ໃຫ້ກັບພາລະກິດຂອງເຮົາ? ຫຼັກຖານທີ່ພວກເຈົ້າວ່າສາມາດເຂົ້າກັບເຮົາໄດ້ນັ້ນຢູ່ໃສ? ຄວາມເປັນຈິງຂອງຄວາມຈົງຮັກພັກດີທີ່ເຈົ້າມີຕໍ່ເຮົາຢູ່ໃສ? ຄວາມເປັນຈິງໃນຄວາມເຊື່ອຟັງທີ່ເຈົ້າມີຕໍ່ເຮົາແມ່ນຢູ່ໃສ? ມີເມື່ອໃດແດ່ທີ່ເຈດຕະນາຂອງເຈົ້າບໍ່ຫວັງທີ່ຈະໄດ້ຮັບພອນຈາກເຮົາ? ພວກເຈົ້າຫຼອກລວງ ແລະ ຕົວະເຮົາ, ພວກເຈົ້າຫຼິ້ນກັບຄວາມຈິງ, ພວກເຈົ້າປິດບັງການເປັນຢູ່ຂອງຄວາມຈິງ ແລະ ທໍລະຍົດແກ່ນແທ້ຂອງຄວາມຈິງ. ແມ່ນຫຍັງຈະລໍຖ້າພວກເຈົ້າໃນອະນາຄົດໂດຍການຕໍ່ຕ້ານເຮົາໃນລັກສະນະນີ້? ພວກເຈົ້າພຽງແຕ່ສະແຫວງຫາເພື່ອເຂົ້າກັບພຣະເຈົ້າທີ່ເລື່ອນລອຍ ແລະ ພຽງແຕ່ສະແຫວງຫາຄວາມເຊື່ອທີ່ເລື່ອນລອຍ ແຕ່ພວກເຈົ້າກໍ່ບໍ່ສະແຫວງຫາເພື່ອເຂົ້າກັບພຣະຄຣິດເລີຍ. ຄວາມຊົ່ວຮ້າຍຂອງພວກເຈົ້າຈະບໍ່ໄດ້ຮັບຜົນກຳແບບດຽວກັນກັບຜູ້ຄົນທີ່ຊົ່ວຊ້າສົມຄວນໄດ້ຮັບບໍ? ໃນເວລານັ້ນ, ພວກເຈົ້າຈະສຳນຶກໄດ້ວ່າ ບໍ່ມີໃຜທີ່ບໍ່ເຂົ້າກັບພຣະຄຣິດຈະສາມາດຫຼົບໜີມື້ແຫ່ງຄວາມໂກດຮ້າຍໄດ້ ແລະ

ພວກເຈົ້າຈະຄົ້ນພົບວ່າຜົນກຳແບບໃດທີ່ຈະຖືກນຳມາສູ່ຄົນທີ່ຕໍ່ຕ້ານພຣະຄຣິດ. ເມື່ອມື້ນັ້ນມາເຖິງ, ຄວາມຝັນຂອງພວກເຈົ້າທີ່ຈະໄດ້ຮັບພອນສຳລັບຄວາມເຊື່ອທີ່ເຈົ້າມີໃນພຣະເຈົ້າ ແລະ ຈະໄດ້ຮັບສິດເຂົ້າສູ່ສະຫວັນນັ້ນຈະຖືກພັງທະລາຍລົງທັງໝົດ. ເຖິງຢ່າງໃດກໍ່ຕາມ ສຳລັບຄົນທີ່ສາມາດເຂົ້າກັບພຣະຄຣິດໄດ້, ມັນຈະບໍ່ແມ່ນແບບນັ້ນ, ເຖິງແມ່ນວ່າພວກເຂົາສູນເສຍຫຼາຍສິ່ງຫຼາຍຢ່າງ, ເຖິງແມ່ນວ່າພວກເຂົາທົນທຸກກັບຄວາມຍາກລຳບາກຫຼາຍຢ່າງ, ພວກເຂົາຈະໄດ້ຮັບມໍລະດົກທັງໝົດທີ່ເຮົາມອບໃຫ້ກັບມະນຸດຊາດ. ໃນທີ່ສຸດ, ພວກເຈົ້າຈະເຂົ້າໃຈວ່າ ມີພຽງເຮົາທີ່ເປັນພຣະເຈົ້າທີ່ຊອບທຳ ແລະ ມີພຽງເຮົາທີ່ສາມາດນຳມະນຸດໄປສູ່ຈຸດໝາຍປາຍທາງທີ່ສວຍງາມຂອງເຂົາໄດ້.

# ເຈົ້າແມ່ນຜູ້ເຊື່ອທີ່ແທ້ຈິງໃນພຣະເຈົ້າບໍ?

ເຈົ້າອາດໄດ້ຍ່າງໃນເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າ ຫຼາຍກວ່າໜຶ່ງ ຫຼື ສອງປີ ແລະ ບາງເທື່ອເຈົ້າໄດ້ທົນທຸກກັບຄວາມລຳບາກຫຼາຍຢ່າງໃນຊີວິດຂອງເຈົ້າໃນໄລຍະເວລາຫຼາຍປີນີ້; ຫຼື ບາງເທື່ອເຈົ້າອາດບໍ່ໄດ້ພະເຊີນກັບຄວາມຍາກລຳບາກຫຼາຍ ແລະ ໄດ້ຮັບຄວາມກະລຸນາຢ່າງຫຼວງຫຼາຍແທນ. ມັນອາດເປັນໄປໄດ້ວ່າເຈົ້າບໍ່ໄດ້ປະສົບກັບຄວາມຍາກລຳບາກ ຫຼື ຄວາມກະລຸນາ, ແຕ່ກົງກັນຂ້າມແມ່ນໄດ້ດຳລົງຊີວິດທີ່ທຳມະດາ. ແນວໃດກໍຕາມ ເຈົ້າຍັງຄົງເປັນຜູ້ຕິດຕາມຂອງພຣະເຈົ້າ, ດັ່ງນັ້ນຂໍໃຫ້ພວກເຮົາມາຮ່ວມສົນທະນາກັນກ່ຽວກັບການຕິດຕາມພຣະອົງ. ເຖິງແນວໃດກໍຕາມ ເຮົາຕ້ອງເຕືອນທຸກຄົນທີ່ອ່ານພຣະທຳເຫຼົ່ານີ້ວ່າພຣະທຳຂອງພຣະເຈົ້າແມ່ນແນໃສ່ທຸກຄົນທີ່ຍອມຮັບຮູ້ ແລະ ຕິດຕາມພຣະອົງ, ບໍ່ແມ່ນໃສ່ທຸກຄົນ ບໍ່ວ່າພວກເຂົາຮັບຮູ້ພຣະອົງ ຫຼື ບໍ່. ຖ້າເຈົ້າເຊື່ອວ່າພຣະເຈົ້າກຳລັງກ່າວຕໍ່ຝູງຊົນ, ຕໍ່ທຸກຄົນໃນໂລກ, ແລ້ວພຣະທຳຂອງພຣະເຈົ້າກໍ່ຈະບໍ່ມີຜົນຫຍັງຕໍ່ເຈົ້າ. ສະນັ້ນ, ເຈົ້າຄວນຈື່ພຣະທຳເຫຼົ່ານີ້ທັງໝົດໄວ້ໃນຫົວໃຈຂອງເຈົ້າ ແລະ ບໍ່ເອົາຕົນເອງອອກຈາກພຣະທຳດັ່ງກ່າວ. ໃນກໍລະນີໃດກໍຕາມ, ໃຫ້ພວກເຮົາເວົ້າເຖິງສິ່ງທີ່ກຳລັງເກີດຂຶ້ນຢູ່ໃນເຮືອນຂອງພວກເຮົາ.

ຕອນນີ້ ພວກເຈົ້າທຸກຄົນຄວນເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງການເຊື່ອໃນພຣະເຈົ້າ. ຄວາມໝາຍຂອງຄວາມເຊື່ອໃນພຣະເຈົ້າທີ່ເຮົາໄດ້ກ່າວເຖິງກ່ອນໜ້ານີ້ແມ່ນກ່ຽວຂ້ອງກັບທາງເຂົ້າດ້ານບວກຂອງພວກເຈົ້າ. ມື້ນີ້ແມ່ນແຕກຕ່າງ: ມື້ນີ້ ເຮົາຈະວິເຄາະເຖິງແກ່ນແທ້ແຫ່ງຄວາມເຊື່ອໃນພຣະເຈົ້າຂອງພວກເຈົ້າ. ແນ່ນອນວ່າ ນີ້ແມ່ນການຊີ້ນຳພວກເຈົ້າຈາກດ້ານລົບ; ຖ້າເຮົາບໍ່ເຮັດດັ່ງນີ້, ພວກເຈົ້າກໍ່ຈະບໍ່ຮູ້ຈັກໃບໜ້າທີ່ແທ້ຈິງຂອງພວກເຈົ້າ ແລະ ຈະອວດອ້າງຄວາມສັດທາ ແລະ ຄວາມຊື່ສັດຂອງພວກເຈົ້າຕະຫຼອດໄປ. ມັນຖືກຕ້ອງທີ່ຈະເວົ້າວ່າ ຖ້າເຮົາບໍ່ເປີດໂປງຄວາມຂີ້ຮ້າຍ ໃນສ່ວນເລິກຂອງຫົວໃຈຂອງພວກເຈົ້າ, ແລ້ວພວກເຈົ້າແຕ່ລະຄົນກໍ່ຈະວາງມົງກຸດໄວ້ເທິງຫົວຂອງພວກເຈົ້າ ແລະ ໃຫ້ຄວາມສະຫງ່າລາສີທັງໝົດແກ່ພວກເຈົ້າເອງ. ທຳມະຊາດຄວາມອວດດີ ແລະ ຄວາມຈອງຫອງຂອງພວກເຈົ້າເຮັດໃຫ້ພວກເຈົ້າທໍລະຍົດຄວາມສຳນຶກຂອງພວກເຈົ້າເອງ, ກະບົດ ແລະ ຕໍ່ຕ້ານພຣະຄຣິດ ແລະ ເປີດເຜີຍຄວາມຂີ້ຮ້າຍຂອງພວກເຈົ້າ, ດັ່ງນັ້ນຈຶ່ງເປີດເຜີຍໃຫ້ເຫັນເຈດຕະນາ, ຄວາມຄິດ, ຄວາມປາຖະໜາເກີນຄວນ ແລະ ຕາທີ່ເຕັມໄປດ້ວຍຄວາມໂລບມາກໂລພາຂອງພວກເຈົ້າສູ່ສາທາລະນະ. ແລ້ວເຖິງຢ່າງໃດກໍຕາມ ພວກເຈົ້າຍັງສືບຕໍ່ເວົ້າແບບໂງ່ໆກ່ຽວກັບຄວາມຫຼົງໄຫຼຕະຫຼອດຊີວິດຂອງພວກເຈົ້າສຳລັບພາລະກິດຂອງພຣະຄຣິດ ແລະ ເວົ້າແລ້ວເວົ້າອີກເຖິງຄວາມຈິງທີ່ພຣະຄຣິດໄດ້ກ່າວແຕ່ດົນນານມາແລ້ວ. ນີ້ແມ່ນ “ຄວາມເຊື່ອ” ຂອງພວກເຈົ້າ, “ຄວາມເຊື່ອທີ່ບໍ່ບໍລິສຸດ” ຂອງພວກເຈົ້າ. ຕະຫຼອດຜ່ານມາ ເຮົາໄດ້ຍຶດຕິດມະນຸດກັບມາດຕະຖານທີ່ເຂັ້ມງວດຫຼາຍ. ຖ້າຄວາມຈົງຮັກພັກດີຂອງເຈົ້າມາພ້ອມກັບເຈດຕະນາ ແລະ ເງື່ອນໄຂ, ແລ້ວເຮົາກໍຈະບໍ່ຂໍມີສິ່ງທີ່ເອີ້ນວ່າຄວາມຈົງຮັກພັກດີ, ເພາະວ່າເຮົາກຽດຊັງຄົນທີ່ຫຼອກລວງເຮົາຜ່ານເຈດຕະນາຂອງພວກເຂົາ ແລະ ຂູດຮີດເຮົາດ້ວຍເງື່ອນໄຂຕ່າງໆ. ເຮົາພຽງປາຖະໜາໃຫ້ມະນຸດຈົງຮັກພັກດີຕໍ່ເຮົາຢ່າງທີ່ສຸດ ແລະ ເຮັດທຸກສິ່ງເພື່ອເຫັນແກ່ ແລະ

ເພື່ອພິສູດໜຶ່ງຄໍາຄື: ຄວາມເຊື່ອ. ເຮົາກຽດຊັງການໃຊ້ຄໍາເວົ້າທີ່ອ່ອນຫວານຂອງພວກເຈົ້າເພື່ອເຮັດໃຫ້ເຮົາຍິນດີ, ເພາະວ່າເຮົາປະຕິບັດຕໍ່ພວກເຈົ້າດ້ວຍຄວາມຈິງໃຈຢູ່ສະເໝີ ແລະ ສະນັ້ນ ເຮົາປາຖະໜາຢາກໃຫ້ພວກເຈົ້າປະຕິບັດຕໍ່ເຮົາດ້ວຍຄວາມເຊື່ອທີ່ແທ້ຈິງເຊັ່ນກັນ. ເມື່ອເວົ້າເຖິງຄວາມເຊື່ອ, ຫຼາຍຄົນອາດຄິດວ່າພວກເຂົາຕິດຕາມພຣະເຈົ້າຍ້ອນວ່າພວກເຂົາມີຄວາມເຊື່ອ ແລະ ບໍ່ດັ່ງນັ້ນກໍຈະບໍ່ທົນຕໍ່ຄວາມທຸກທໍລະມານດັ່ງກ່າວ. ແລ້ວເຮົາຂໍຖາມເຈົ້າດັ່ງນີ້: ຖ້າເຈົ້າເຊື່ອໃນການເປັນຢູ່ຂອງພຣະເຈົ້າ, ເປັນຫຍັງເຈົ້າຈຶ່ງບໍ່ເຄີຍເຄົາລົບນັບຖືພຣະອົງ? ຖ້າເຈົ້າເຊື່ອໃນການເປັນຢູ່ຂອງພຣະເຈົ້າ, ເປັນຫຍັງຈຶ່ງບໍ່ມີຄວາມຢໍາເກງຕໍ່ພຣະອົງແມ່ນແຕ່ໜ້ອຍດຽວໃນຫົວໃຈຂອງເຈົ້າ? ເຈົ້າຍອມຮັບວ່າພຣະຄຣິດແມ່ນການບັງເກີດເປັນມະນຸດຂອງພຣະເຈົ້າ ແລ້ວເປັນຫຍັງເຈົ້າຈຶ່ງດູຖູກພຣະອົງ? ເປັນຫຍັງເຈົ້າຈຶ່ງປະຕິບັດຕໍ່ພຣະອົງຢ່າງບໍ່ເຄົາລົບ? ເປັນຫຍັງເຈົ້າຈຶ່ງຕັດສິນພຣະອົງຢ່າງເປີດເຜີຍ? ເປັນຫຍັງເຈົ້າຈຶ່ງເບິ່ງການເຄື່ອນໄຫວຂອງພຣະອົງຢູ່ສະເໝີ? ເປັນຫຍັງເຈົ້າຈຶ່ງບໍ່ຍອມຮັບເອົາການຈັດແຈງຂອງພຣະອົງ? ເປັນຫຍັງເຈົ້າຈຶ່ງບໍ່ປະຕິບັດຕາມພຣະທໍາຂອງພຣະອົງ? ເປັນຫຍັງເຈົ້າຈຶ່ງຂູດຮີດ ແລະ ປຸ້ນພຣະອົງຈາກເຄື່ອງບູຊາຂອງພຣະອົງ? ເປັນຫຍັງເຈົ້າຈຶ່ງເວົ້າຈາກສະຖານະຂອງພຣະຄຣິດ? ເປັນຫຍັງເຈົ້າຈຶ່ງຕັດສິນວ່າພາລະກິດຂອງພຣະອົງ ແລະ ພຣະທໍາຂອງພຣະອົງນັ້ນຖືກຕ້ອງ ຫຼື ບໍ່? ເປັນຫຍັງເຈົ້າຈຶ່ງກ້າໝິ່ນປະໝາດລັບຫຼັງພຣະອົງ? ສິ່ງເຫຼົ່ານີ້ ແລະ ອື່ນໆ ບໍ່ໄດ້ປະກອບເປັນຄວາມເຊື່ອຂອງພວກເຈົ້າບໍ?

ໃນຄໍາເວົ້າ ແລະ ພຶດຕິກໍາຂອງພວກເຈົ້າແມ່ນສະແດງໃຫ້ເຫັນອົງປະກອບຂອງການບໍ່ເຊື່ອໃນພຣະຄຣິດ. ຄວາມບໍ່ເຊື່ອແຜ່ກະຈາຍໄປທົ່ວແຮງຈູງໃຈ ແລະ ເປົ້າໝາຍຂອງທຸກສິ່ງທີ່ພວກເຈົ້າເຮັດ; ເຖິງແມ່ນລັກສະນະສາຍຕາຂອງພວກເຈົ້າມີຄວາມບໍ່ເຊື່ອໃນພຣະຄຣິດ. ມັນສາມາດເວົ້າໄດ້ວ່າທຸກນາທີ ພວກເຈົ້າແຕ່ລະຄົນມີອົງປະກອບຂອງຄວາມບໍ່ເຊື່ອຢູ່. ນີ້ໝາຍຄວາມວ່າ, ທຸກໆຊ່ວງເວລາພວກເຈົ້າແມ່ນຢູ່ໃນອັນຕະລາຍທີ່ຈະທໍລະຍົດພຣະຄຣິດ, ເພາະເລືອດທີ່ໄຫຼຢູ່ໃນຮ່າງກາຍຂອງພວກເຈົ້ານັ້ນຖືກສີດໄປດ້ວຍຄວາມບໍ່ເຊື່ອໃນພຣະເຈົ້າຜູ້ບັງເກີດເປັນມະນຸດ. ສະນັ້ນ, ເຮົາຈຶ່ງເວົ້າວ່າຮອຍຕີນທີ່ພວກເຈົ້າປະໄວ້ບົນເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້ານັ້ນບໍ່ເປັນຈິງເລີຍ; ໃນຂະນະທີ່ພວກເຈົ້າຍ່າງຕາມເສັ້ນທາງແຫ່ງຄວາມເຊື່ອໃນພຣະເຈົ້າ, ພວກເຈົ້າບໍ່ໄດ້ວາງຕີນຂອງພວກເຈົ້າລົງພື້ນດິນຢ່າງໜັກແໜ້ນ, ພວກເຈົ້າພຽງກໍາລັງທໍາທ່າເຮັດ. ພວກເຈົ້າບໍ່ເຄີຍເຊື່ອພຣະທໍາຂອງພຣະຄຣິດຢ່າງສົມບູນ ແລະ ບໍ່ສາມາດນໍາເອົາພຣະທໍາໄປປະຕິບັດໂດຍທັນທີທັນໃດ. ນີ້ແມ່ນເຫດຜົນທີ່ພວກເຈົ້າບໍ່ມີຄວາມເຊື່ອໃນພຣະຄຣິດ. ການມີແນວຄິດຕ່າງໆກ່ຽວກັບພຣະອົງຢູ່ສະເໝີຄືອີກເຫດຜົນໜຶ່ງທີ່ພວກເຈົ້າບໍ່ມີຄວາມເຊື່ອໃນພຣະອົງ. ການມີຄວາມສົງໄສກ່ຽວກັບພາລະກິດຂອງພຣະຄຣິດຢູ່ຕະຫຼອດໄປ, ການປ່ອຍໃຫ້ພຣະທໍາຂອງພຣະຄຣິດຕົກລົງສູ່ຫູທີ່ໜວກ, ການມີຄວາມຄິດເຫັນກ່ຽວກັບພາລະກິດກໍຕາມທີ່ພຣະຄຣິດປະຕິບັດ ແລະ ບໍ່ສາມາດເຂົ້າໃຈພາລະກິດນີ້ໄດ້ຢ່າງຖືກຕ້ອງ, ການດີ້ນລົນເພື່ອປະວາງແນວຄິດຂອງພວກເຈົ້າ ບໍ່ວ່າພວກເຈົ້າຈະໄດ້ຮັບການອະທິບາຍແນວໃດກໍຕາມ ແລະ ອື່ນໆອີກ, ທັງໝົດນີ້ແມ່ນອົງປະກອບຂອງຄວາມບໍ່ເຊື່ອທີ່ປະປົນຢູ່ພາຍໃນຫົວໃຈຂອງພວກເຈົ້າ. ເຖິງແມ່ນວ່າພວກເຈົ້າຕິດຕາມພາລະກິດຂອງພຣະຄຣິດ ແລະ ບໍ່ເຄີຍຢູ່ຕາມຫຼັງ, ມີຄວາມກະບົດຫຼາຍເກີນໄປທີ່

ປະປົນຢູ່ໃນໃຈຂອງພວກເຈົ້າ. ຄວາມກະບົດນີ້ ຄືຄວາມບໍ່ບໍລິສຸດໃນຄວາມເຊື່ອໃນພຣະເຈົ້າຂອງພວກເຈົ້າ. ບາງເທື່ອ ພວກເຈົ້າບໍ່ຄິດວ່າສິ່ງນີ້ຖືກຕ້ອງ, ແຕ່ຖ້າເຈົ້າບໍ່ສາມາດຮັບຮູ້ເຈດຕະນາຂອງເຈົ້າຈາກສິ່ງນີ້ໄດ້, ແລ້ວເຈົ້າກໍຖືກຜູກມັດໃຫ້ຢູ່ທ່າມກາງຄົນທີ່ຈະພິນາດ, ຍ້ອນພຣະເຈົ້າເຮັດໃຫ້ຜູ້ທີ່ເຊື່ອໃນພຣະອົງຢ່າງແທ້ຈິງເທົ່ານັ້ນສົມບູນ, ບໍ່ແມ່ນບັນດາຜູ້ທີ່ສົງໄສໃນພຣະອົງ ແລະ ແຮງໜ້ອຍທີ່ສຸດທີ່ຈະເປັນຄົນທີ່ຕິດຕາມພຣະອົງຢ່າງບໍ່ເຕັມໃຈ ເຖິງແມ່ນບໍ່ເຄີຍເຊື່ອວ່າພຣະອົງເປັນພຣະເຈົ້າກໍຕາມ.

ບາງຄົນບໍ່ຊື່ນຊົມຍິນດີໃນຄວາມຈິງ, ແຮງໄກທີ່ຈະຊື່ນຊົມກັບການພິພາກສາ. ກົງກັນຂ້າມ, ພວກເຂົາຊື່ນຊົມຍິນດີໃນອຳນາດ ແລະ ຄວາມຮັ່ງມີ; ຄົນເຊັ່ນນີ້ຖືວ່າເປັນຄົນທີ່ສະແຫວງຫາອຳນາດ. ພວກເຂົາພຽງແຕ່ຄົ້ນຫານິກາຍເຫຼົ່ານັ້ນໃນໂລກທີ່ມີອິດທິພົນ ແລະ ພວກເຂົາຄົ້ນຫາພຽງແຕ່ສິດຍາພິບານ ແລະ ຄູອາຈານທີ່ມາຈາກໂຮງຮຽນສອນສາສະໜາ. ເຖິງແມ່ນວ່າພວກເຂົາໄດ້ຍອມຮັບເສັ້ນທາງແຫ່ງຄວາມຈິງແລ້ວ, ພວກເຂົາກໍພຽງແຕ່ສອງຈິດສອງໃຈ; ພວກເຂົາບໍ່ສາມາດມອບຫົວໃຈ ແລະ ຈິດໃຈທັງໝົດຂອງພວກເຂົາ, ປາກຂອງພວກເຂົາເວົ້າເຖິງການເສຍສະຫຼະຕົນເອງເພື່ອພຣະເຈົ້າ, ແຕ່ສາຍຕາຂອງພວກເຂົາເລັງໃສ່ສິດຍາພິບານ ແລະ ອາຈານຜູ້ຍິ່ງໃຫຍ່ ແລະ ພວກເຂົາບໍ່ໄດ້ຫຼຽວເບິ່ງພຣະຄຣິດອີກຄັ້ງ. ຫົວໃຈຂອງພວກເຂົາເຕັມເລັງໄປທີ່ຊື່ສຽງ, ໂຊກລາບ ແລະ ສະຫງ່າລາສີ. ພວກເຂົາບໍ່ເຊື່ອເລີຍວ່າຜູ້ຊາຍທີ່ຈ່ອຍບາງຄົນນີ້ຈະສາມາດເອົາຊະນະຄົນຫຼວງຫຼາຍໄດ້, ຄົນທີ່ແສນທຳມະດາຄົນໜຶ່ງທີ່ຈະສາມາດເຮັດໃຫ້ຜູ້ຄົນສົມບູນແບບໄດ້. ພວກເຂົາບໍ່ເຊື່ອເລີຍວ່າ ຄົນທີ່ບໍ່ມີຕົວຕົນເຫຼົ່ານີ້ທີ່ຢູ່ໃນທ່າມກາງຂີ້ຝຸ່ນ ແລະ ກອງຂີ້ເຫຍື່ອແມ່ນຜູ້ທີ່ຖືກເລືອກໂດຍພຣະເຈົ້າ. ພວກເຂົາເຊື່ອວ່າຖ້າຄົນເຊັ່ນນັ້ນແມ່ນວັດຖຸປະສົງແຫ່ງຄວາມລອດພົ້ນຂອງພຣະເຈົ້າແລ້ວ, ສະຫວັນ ແລະ ແຜ່ນດິນໂລກກໍ່ຄົງຈະກັບກັນ ແລະ ທຸກຄົນຈະຫົວຂວັນຈົນຢ່າງບ້າປ່ວງ. ພວກເຂົາເຊື່ອວ່າຖ້າພຣະເຈົ້າເລືອກຄົນທີ່ບໍ່ມີຕົວຕົນເຊັ່ນນັ້ນເພື່ອຖືກເຮັດໃຫ້ສົມບູນແບບ, ແລ້ວຜູ້ຍິ່ງໃຫຍ່ເຫຼົ່ານັ້ນກໍຈະກາຍເປັນພຣະເຈົ້າເອງ. ທັດສະນະຂອງພວກເຂົາແມ່ນຖືກເປິເປື້ອນດ້ວຍຄວາມບໍ່ເຊື່ອ; ນອກຈາກຈະບໍ່ເຊື່ອແລ້ວ, ພວກເຂົາເປັນພຽງສັດຮ້າຍທີ່ຜິດປົກກະຕິ. ເພາະພວກເຂົາໃຫ້ຄຸນຄ່າແກ່ສະຖານະ, ສັກສີ ແລະ ອຳນາດ ແລະ ພວກເຂົາເຄົາລົບພຽງແຕ່ຄົນກຸ່ມໃຫຍ່ ແລະ ນິກາຍຕ່າງໆ. ພວກເຂົາບໍ່ມີຄວາມນັບຖືແມ່ນແຕ່ໜ້ອຍດຽວຕໍ່ຜູ້ທີ່ຖືກນຳພາໂດຍພຣະຄຣິດ; ພວກເຂົາເປັນພຽງຄົນທໍລະຍົດທີ່ຫັນຫຼັງໃຫ້ກັບພຣະຄຣິດ, ໃຫ້ຄວາມຈິງ ແລະ ໃຫ້ຊີວິດ.

ສິ່ງທີ່ເຈົ້າເຊີດຊູນັ້ນບໍ່ແມ່ນຄວາມຖ່ອມຕົນຂອງພຣະຄຣິດ, ແຕ່ແມ່ນຜູ້ລ້ຽງແກະຈອມປອມທີ່ມີສະຖານະໂດດເດັ່ນ. ເຈົ້າບໍ່ໄດ້ບູຊາຄວາມໜ້າຮັກ ຫຼື ສະຕິປັນຍາຂອງພຣະຄຣິດ, ແຕ່ບູຊາພວກຄົນໄຮ້ສິນທຳເຫຼົ່ານັ້ນທີ່ກິ້ງເກືອກໃນຄວາມສົກກະປົກຂອງໂລກ. ເຈົ້າຫົວຂວັນຄວາມເຈັບປວດຂອງພຣະຄຣິດຜູ້ທີ່ບໍ່ມີແມ່ນແຕ່ບ່ອນຈະວາງຫົວຂອງພຣະອົງ, ແຕ່ເຈົ້າເຊີດຊູຊາກສົບເຫຼົ່ານັ້ນທີ່ລ່າເອົາເຄື່ອງຖວາຍບູຊາ ແລະ ໃຊ້ຊີວິດຢູ່ກັບການມົ້ນເມົາ. ເຈົ້າບໍ່ເຕັມໃຈທີ່ຈະທົນທຸກຄຽງຂ້າງກັບພຣະຄຣິດ, ແຕ່ເຈົ້າຍິນດີເຂົ້າໄປໃນອ້ອມແຂນຂອງພວກຜູ້ຕໍ່ຕ້ານພຣະຄຣິດທີ່ບໍ່ຮອບຄອບເຫຼົ່ານັ້ນ ເຖິງແມ່ນວ່າພວກເຂົາພຽງແຕ່ສະໜອງໃຫ້ເຈົ້າດ້ວຍເນື້ອໜັງ, ຄຳເວົ້າ ແລະ ການຄວບຄຸມ. ແມ່ນແຕ່ດຽວນີ້ຫົວໃຈຂອງເຈົ້າ

ກໍຍັງຫັນໄປຫາພວກເຂົາຢູ່, ໄປຫາຊື່ສຽງຂອງພວກເຂົາ, ໄປຫາສະຖານະຂອງພວກເຂົາ ແລະ ໄປຫາອິດທິພົນພວກເຂົາ. ແລ້ວເຈົ້າສືບຕໍ່ມີທ່າທີ່ເຈົ້າພົບວ່າພາລະກິດຂອງພຣະຄຣິດຍາກທີ່ຈະກືນ ແລະ ເຈົ້າບໍ່ເຕັມໃຈທີ່ຈະຍອມຮັບມັນ. ນີ້ຄືເຫດຜົນທີ່ເຮົາບອກເຈົ້າວ່າ ເຈົ້າຂາດຄວາມເຊື່ອທີ່ຈະຍອມຮັບພຣະຄຣິດ. ເຫດຜົນທີ່ເຈົ້າໄດ້ຕິດຕາມພຣະອົງຈົນຮອດທຸກວັນນີ້ກໍພຽງແຕ່ຍ້ອນວ່າເຈົ້າບໍ່ມີທາງເລືອກອື່ນ. ກຸ່ມບຸກຄົນທີ່ສູງສົ່ງຢືນຢູ່ໃນຫົວໃຈຂອງເຈົ້າຕະຫຼອດໄປ; ເຈົ້າບໍ່ສາມາດຫຼົງລືມທຸກໆຄຳເວົ້າ ແລະການກະທຳຂອງພວກເຂົາ ຫຼື ຄຳເວົ້າ ແລະ ມືທີ່ມີອິດທິພົນຂອງພວກເຂົາ. ຢູ່ພາຍໃນຫົວໃຈພວກເຈົ້າ, ພວກເຂົາສູງສຸດ ແລະ ເປັນວິລະບຸລຸດຕະຫຼອດການ. ແຕ່ບໍ່ເປັນເຊັ່ນນັ້ນສຳລັບພຣະຄຣິດໃນທຸກວັນນີ້. ພຣະອົງບໍ່ມີຄວາມສຳຄັນໃນຫົວໃຈຂອງເຈົ້າຕະຫຼອດໄປ ແລະ ບໍ່ສົມຄວນໄດ້ຮັບຄວາມເຄົາລົບນັບຖືຕະຫຼອດໄປ. ເພາະວ່າພຣະອົງທຳມະດາເກີນໄປ, ມີອິດທິພົນໜ້ອຍເກີນໄປ ແລະ ບໍ່ມີຄວາມສູງສົ່ງຫຍັງທັງສິ້ນ.

ໃນກໍລະນີໃດກໍຕາມ, ເຮົາຂໍບອກວ່າທຸກຄົນທີ່ບໍ່ຊື່ນຊົມຄວາມຈິງແມ່ນຜູ້ທີ່ບໍ່ເຊື່ອ ແລະ ເປັນຜູ້ທໍລະຍົດຕໍ່ຄວາມຈິງ. ຄົນເຊັ່ນນັ້ນຈະບໍ່ມີວັນໄດ້ຮັບການຍອມຮັບຈາກພຣະຄຣິດ. ຕອນນີ້ເຈົ້າໄດ້ຮູ້ແລ້ວບໍວ່າຄວາມບໍ່ເຊື່ອຢູ່ພາຍໃນຕົວເຈົ້ານັ້ນມີຫຼາຍສໍ່າໃດ ແລະ ມີເຈົ້າມີຄວາມທໍລະຍົດຕໍ່ພຣະຄຣິດຫຼາຍສໍ່າໃດ? ເຮົາຂໍເຕືອນເຈົ້າດັ່ງນີ້: ຍ້ອນເຈົ້າໄດ້ເລືອກເສັ້ນທາງແຫ່ງຄວາມຈິງແລ້ວ, ເຈົ້າກໍ່ຄວນອຸທິດຕົນເອງ ຢ່າງສຸດໃຈ; ຢ່າສອງຈິດສອງໃຈ ແລະ ລັງເລໃຈ. ເຈົ້າຄວນເຂົ້າໃຈວ່າພຣະເຈົ້າບໍ່ໄດ້ເປັນຂອງໂລກ ຫຼື ຂອງບຸກຄົນໃດໜຶ່ງ, ແຕ່ເປັນຂອງທຸກຄົນທີ່ເຊື່ອໃນພຣະອົງຢ່າງແທ້ຈິງ, ເປັນຂອງທຸກຄົນທີ່ນະມັດສະການພຣະອົງ ແລະ ທຸກຄົນທີ່ໄດ້ອຸທິດຕົນ ແລະ ຊື່ສັດຕໍ່ພຣະອົງ.

ໃນປັດຈຸບັນນີ້, ຄວາມບໍ່ເຊື່ອຍັງມີຫຼາຍຢູ່ໃນຕົວພວກເຈົ້າ. ໃຫ້ເບິ່ງຫຼາຍຂຶ້ນພາຍໃນຕົວພວກເຈົ້າ ແລະ ພວກເຈົ້າຈະພົບຄຳຕອບຂອງພວກເຈົ້າຢ່າງແນ່ນອນ. ເມື່ອເຈົ້າພົບຄຳຕອບທີ່ແທ້ຈິງແລ້ວ, ຈາກນັ້ນເຈົ້າຈະຍອມຮັບວ່າເຈົ້າບໍ່ແມ່ນຜູ້ທີ່ເຊື່ອໃນພຣະເຈົ້າ, ແຕ່ກົງກັນຂ້າມ ເຈົ້າເປັນຄົນທີ່ຫຼອກລວງ, ດູໝິ່ນ ແລະ ທໍລະຍົດຕໍ່ພຣະອົງ ແລະ ເປັນຄົນທີ່ບໍ່ຈົງຮັກພັກດີຕໍ່ພຣະອົງ. ແລ້ວເຈົ້າຈະຮັບຮູ້ວ່າພຣະຄຣິດບໍ່ແມ່ນມະນຸດ, ແຕ່ເປັນພຣະເຈົ້າ. ເມື່ອວັນນັ້ນມາເຖິງ, ເຈົ້າຈະສັນລະເສີນ, ຢຳເກງ ແລະຮັກພຣະຄຣິດຢ່າງແທ້ຈິງ. ໃນປັດຈຸບັນນີ້, ມີພຽງແຕ່ສາມສິບເປີເຊັນຂອງຫົວໃຈຂອງພວກເຈົ້າເທົ່ານັ້ນທີ່ເຕັມໄປດ້ວຍຄວາມເຊື່ອ, ສ່ວນອີກເຈັດສິບເປີເຊັນນັ້ນແມ່ນເຕັມໄປດ້ວຍຄວາມສົງໄສ. ທຸກສິ່ງທີ່ພຣະຄຣິດເຮັດ ແລະ ເວົ້າ ແມ່ນອາດຈະເຮັດໃຫ້ພວກເຈົ້າມີແນວຄິດ ແລະ ຄຳຄິດເຫັນກ່ຽວກັບພຣະອົງ, ເຊິ່ງເປັນແນວຄິດ ແລະ ຄຳຄິດເຫັນທີ່ເກີດຈາກຄວາມບໍ່ເຊື່ອແທ້ໆຂອງພວກເຈົ້າໃນພຣະອົງ. ພວກເຈົ້າເຊີດຊູ ແລະ ຢຳເກງສະເພາະແຕ່ພຣະເຈົ້າທີ່ຢູ່ເທິງຟ້າສະຫວັນທີ່ແນມບໍ່ເຫັນເທົ່ານັ້ນ ແລະ ບໍ່ມີຄວາມເຄົາລົບຕໍ່ພຣະຄຣິດທີ່ດຳລົງຊີວິດຢູ່ເທິງແຜ່ນດິນໂລກ. ນີ້ບໍ່ແມ່ນຄວາມບໍ່ເຊື່ອຂອງພວກເຈົ້າເຊັ່ນກັນບໍ? ພວກເຈົ້າພຽງສະແຫວງຫາພຣະເຈົ້າທີ່ໄດ້ປະຕິບັດພາລະກິດໃນອະດີດ ແຕ່ບໍ່ເງີຍໜ້າຂຶ້ນຫາພຣະຄຣິດໃນປັດຈຸບັນເລີຍ. ນີ້ເປັນພຽງ "ຄວາມເຊື່ອ" ທີ່ປະປົນຢູ່ໃນຫົວໃຈຂອງພວກເຈົ້າຢູ່ຕະຫຼອດໄປ, ຄວາມເຊື່ອທີ່ບໍ່ໄດ້ເຊື່ອໃນພຣະຄຣິດໃນປັດຈຸບັນ. ເຮົາບໍ່ໄດ້ປະເມີນພວກເຈົ້າຕໍ່າ,

ເພາະວ່າພວກເຈົ້າມີຄວາມບໍ່ເຊື່ອໃນຕົວຂອງພວກເຈົ້າຫຼາຍເກີນໄປ, ຫຼາຍຢ່າງເກີນໄປໃນພວກເຈົ້າທີ່ບໍ່ບໍລິສຸດ ແລະ ຕ້ອງຖືກກວດສອບ. ຄວາມບໍ່ບໍລິສຸດເຫຼົ່ານີ້ເປັນສັນຍານບົ່ງບອກວ່າພວກເຈົ້າບໍ່ມີຄວາມເຊື່ອເລີຍ; ພວກມັນເປັນເຄື່ອງໝາຍແຫ່ງການປະຖິ້ມພຣະຄຣິດຂອງພວກເຈົ້າ ແລະ ພວກມັນໝາຍພວກເຈົ້າໄວ້ເປັນຜູ້ທໍລະຍົດຕໍ່ພຣະຄຣິດ. ພວກມັນແມ່ນຜ້າຄຸມໜາທີ່ປົກຄຸມຄວາມຮູ້ຂອງພວກເຈົ້າກ່ຽວກັບພຣະຄຣິດ, ເປັນອຸປະສັກຕໍ່ການຖືກຮັບໂດຍພຣະຄຣິດ, ເປັນອຸປະສັກທີ່ຂັດຂວາງບໍ່ໃຫ້ພວກເຈົ້າເຂົ້າກັນໄດ້ກັບພຣະຄຣິດ ແລະ ຍັງເປັນຂໍ້ພິສູດວ່າພຣະຄຣິດບໍ່ເຫັນດີໃນຕົວພວກເຈົ້າ. ຕອນນີ້ ເຖິງເວລາທີ່ຕ້ອງກວດສອບທຸກພາກສ່ວນໃນຊີວິດພວກເຈົ້າ! ການເຮັດເຊັ່ນນີ້ ຈະເປັນປະໂຫຍດແກ່ພວກເຈົ້າໃນທຸກດ້ານທີ່ບໍ່ສາມາດຈິນຕະນາການໄດ້!

# ພຣະຄຣິດປະຕິບັດພາລະກິດ ແຫ່ງການພິພາກສາດ້ວຍຄວາມຈິງ

ພາລະກິດຂອງຍຸກສຸດທ້າຍແມ່ນເພື່ອຈັດແບ່ງທຸກສິ່ງອອກຕາມປະເພດໃຜປະເພດມັນ ແລະ ເພື່ອສິ້ນສຸດແຜນການຄຸ້ມຄອງຂອງພຣະເຈົ້າ, ເພາະວ່າ ເວລາໃກ້ມາເຖິງແລ້ວ ແລະ ມື້ຂອງພຣະເຈົ້າມາຮອດແລ້ວ. ພຣະເຈົ້ານໍາເອົາທຸກຄົນທີ່ໄດ້ເຂົ້າສູ່ອານາຈັກຂອງພຣະອົງ, ນັ້ນກໍຄື ຜູ້ຄົນທັງໝົດທີ່ຊື່ສັດຕໍ່ພຣະອົງຈົນເຖິງທີ່ສຸດ ເຂົ້າສູ່ຍຸກຂອງພຣະເຈົ້າເອງ. ແຕ່ວ່າ, ພາລະກິດທີ່ພຣະເຈົ້າຕ້ອງປະຕິບັດກ່ອນທີ່ຍຸກຂອງພຣະເຈົ້າເອງຈະມາເຖິງນັ້ນ ບໍ່ແມ່ນເພື່ອສັງເກດການປະພຶດຂອງມະນຸດ ຫຼື ຂຸດຄົ້ນຫາຊີວິດຂອງມະນຸດ, ແຕ່ເພື່ອພິພາກສາຄວາມບໍ່ເຊື່ອຟັງຂອງພວກເຂົາ ເພາະວ່າພຣະເຈົ້າຈະຕ້ອງຊໍາລະລ້າງຜູ້ຄົນທັງໝົດທີ່ມາຢູ່ຕໍ່ໜ້າບັນລັງຂອງພຣະອົງໃຫ້ບໍລິສຸດ. ຜູ້ຄົນທັງໝົດທີ່ໄດ້ເດີນຕາມບາດກ້າວຂອງພຣະເຈົ້າຈົນເຖິງທຸກວັນນີ້ ແມ່ນຜູ້ທີ່ໄດ້ມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ ແລະ ດ້ວຍເຫດນີ້ ທຸກຄົນທີ່ຮັບເອົາພາລະກິດຂອງພຣະເຈົ້າໃນຂັ້ນຕອນສຸດທ້າຍຄືຄົນທີ່ພຣະເຈົ້າຊໍາລະລ້າງໃຫ້ບໍລິສຸດ. ເວົ້າໄດ້ອີກຢ່າງໜຶ່ງກໍຄື ທຸກຄົນທີ່ຮັບເອົາພາລະກິດຂອງພຣະເຈົ້າໃນຂັ້ນຕອນສຸດທ້າຍນີ້ຄືຄົນທີ່ໄດ້ຮັບເອົາການພິພາກສາຂອງພຣະເຈົ້າ.

ໃນການພິພາກສາທີ່ເລີ່ມຕົ້ນຈາກຄົວເຮືອນຂອງພຣະເຈົ້ານັ້ນ, "ການພິພາກສາ" ໃນພຣະທໍາເຫຼົ່ານີ້ໝາຍເຖິງ ການພິພາກສາທີ່ພຣະເຈົ້າຈະດໍາເນີນໃນມື້ນີ້ກັບຜູ້ຄົນທີ່ມາຢູ່ຕໍ່ໜ້າບັນລັງຂອງພຣະອົງໃນຍຸກແຫ່ງສຸດທ້າຍ. ບາງທີອາດຍັງມີຜູ້ຄົນທີ່ເຊື່ອໃນຈິນຕະນາການເໜືອທໍາມະຊາດທີ່ວ່າ: ເມື່ອຍຸກສຸດທ້າຍມາເຖິງ, ພຣະເຈົ້າຈະຕັ້ງໂຕະໃຫຍ່ໃນສະຫວັນ, ປູໂຕະນັ້ນດ້ວຍຜ້າສີຂາວ ແລະ ຫລັງຈາກນັ້ນພຣະອົງຈະນັ່ງຢູ່ເທິງບັນລັງທີ່ຍິ່ງໃຫຍ່ ໂດຍທີ່ມະນຸດທຸກຄົນຈະພາກັນຄຸເຂົ່າຂາບລົງດິນ, ແລ້ວພຣະອົງຈະເປີດເຜີຍຄວາມບາບຂອງແຕ່ລະຄົນ ແລະ ຫລັງຈາກນັ້ນກໍານົດເບິ່ງວ່າຜູ້ໃດຈະຖືກສົ່ງຂຶ້ນໄປສະຫວັນ ຫຼື ຜູ້ໃດຈະຖືກສົ່ງລົງທະເລສາບແຫ່ງໄຟ ແລະ ມາດ. ບໍ່ວ່າມະນຸດຈະຈິນຕະນາການໄປໃນຮູບແບບໃດກໍຕາມ, ມັນບໍ່ສາມາດປ່ຽນແປງແກ່ນແທ້ຂອງພາລະກິດຂອງພຣະເຈົ້າໄດ້. ການອາດພາບຕ່າງໆນາໆຂອງມະນຸດແມ່ນບໍ່ມີຫຍັງ. ຈິນຕະນາການຂອງມະນຸດເປັນພຽງການສ້າງຂຶ້ນຈາກແນວຄວາມຄິດຂອງມະນຸດ; ພວກມັນມາຈາກສະໝອງຂອງມະນຸດທີ່ສະສົມ ແລະ ຮວບຮວມເອົາເລື່ອງຕ່າງໆນາໆທີ່ຕົນໄດ້ເຫັນ ແລະ ໄດ້ຍິນ. ສະນັ້ນ ເຮົາຈຶ່ງເວົ້າວ່າ ບໍ່ວ່າພາບທີ່ປະດິດຄິດແຕ່ງຂຶ້ນເອງນັ້ນຈະດີເລີດພຽງໃດ ພວກມັນກໍ່ເປັນພຽງພາບແຕ້ມກາຕູນ ແລະ ບໍ່ສາມາດໃຊ້ແທນແຜນການໃນພາລະກິດຂອງພຣະເຈົ້າໄດ້. ໃນທີ່ສຸດແລ້ວ ມະນຸດຖືກເສື່ອມໂຊມໂດຍຊາຕານ ສະນັ້ນພວກເຂົາຈະເຂົ້າໃຈຄວາມຄິດຂອງພຣະເຈົ້າໄດ້ແນວໃດ? ມະນຸດຄິດໄປເອງວ່າ ພາລະກິດແຫ່ງການພິພາກສາຂອງພຣະເຈົ້າຕ້ອງເປັນສິ່ງທີ່ວິເສດ. ເຂົາເຊື່ອວ່າ ໃນເມື່ອພຣະເຈົ້າປະຕິບັດພາລະກິດພິພາກສາດ້ວຍຕົນເອງ, ສະນັ້ນ ມັນຕ້ອງຍິ່ງໃຫຍ່ອາລັງການ ແລະ ເປັນສິ່ງທີ່ມະນຸດບໍ່ສາມາດເຂົ້າໃຈໄດ້ ແລະ ມັນຕ້ອງດັງໄປທົ່ວສະຫວັນ ແລະ ສັ່ນສະເທືອນໄປທົ່ວໂລກ, ບໍ່ດັ່ງນັ້ນ ມັນຈະເປັນພາລະກິດພິພາກສາຂອງພຣະເຈົ້າ

ໄດ້ແນວໃດ? ເຂົາເຊື່ອວ່າ ໃນເມື່ອນີ້ຄືພາລະກິດແຫ່ງການພິພາກສາ ສະນັ້ນໃນຂະນະທີ່ພຣະອົງປະຕິບັດພາລະກິດພຣະອົງຕ້ອງສະຫງ່າຜ່າເຜີຍ ແລະ ເດຊານຸພາບເປັນພິເສດ ແລະ ຜູ້ທີ່ຖືກພິພາກສາຕ້ອງຮ້ອງໂຮ່ດ້ວຍນໍ້າຕາ ແລະ ຄຸເຂົ່າຂາບລົງຮ້ອງຂໍຄວາມເມດຕາ. ສາກດັ່ງກ່າວຈະເປັນທີ່ປະທັບໃຈຢ່າງແນ່ນອນ ແລະ ຕື່ນເຕັ້ນຢ່າງເລິກເຊິ່ງ... ທຸກຄົນຈິນຕະນາການວ່າພາລະກິດແຫ່ງການພິພາກສາຂອງພຣະເຈົ້າເປັນສິ່ງທີ່ມະຫັດສະຈັນ. ແຕ່ເຈົ້າຮູ້ບໍວ່າ ໃນເວລາທີ່ພຣະເຈົ້າໄດ້ເລີ່ມຕົ້ນພາລະກິດແຫ່ງການພິພາກສາຂອງພຣະອົງທ່າມກາງມະນຸດຕັ້ງແຕ່ດົນນານແລ້ວນັ້ນ, ເຈົ້າຍັງນອນຫຼັບຢ່າງບໍ່ມີເຫື່ອບໍ່ມີແຮງບໍ? ເຈົ້າຮູ້ບໍວ່າ ໃນເວລາທີ່ເຈົ້າຄິດວ່າພາລະກິດແຫ່ງການພິພາກສາຂອງພຣະເຈົ້າໄດ້ເລີ່ມຕົ້ນເປັນທາງການ, ພຣະເຈົ້າກໍໄດ້ສ້າງສະຫວັນ ແລະ ໂລກໃໝ່ແລ້ວ? ໃນເວລານັ້ນ, ບາງທີເຈົ້າຈະພຽງເຂົ້າໃຈຄວາມໝາຍຂອງຊີວິດເທົ່ານັ້ນ, ແຕ່ພາລະກິດແຫ່ງການລົງໂທດທີ່ບໍ່ມີການເມດຕາຂອງພຣະເຈົ້າຈະນຳເອົາເຈົ້າໄປສູ່ນະຮົກ ໂດຍທີ່ເຈົ້າຍັງນອນຫຼັບສະນິດ. ມີແຕ່ເມື່ອນັ້ນ ເຈົ້າຈຶ່ງຈະຮັບຮູ້ທັນທີວ່າພາລະກິດແຫ່ງການພິພາກສາຂອງພຣະເຈົ້າແມ່ນໄດ້ສິ້ນສຸດລົງແລ້ວ.

ພວກເຮົາຢ່າໄດ້ເສຍເວລາທີ່ມີຄຸນຄ່າຂອງພວກເຮົາ ແລະ ເວົ້າເຖິງຫົວຂໍ້ທີ່ໜ້າກຽດຊັງ ແລະ ໜ້າລັງກຽດນີ້ອີກເລີຍ. ພວກເຮົາມາເວົ້າເຖິງສິ່ງທີ່ລວມກັນເປັນການພິພາກສາແທນ. ເມື່ອເວົ້າເຖິງຄຳ "ພິພາກສາ", ເຈົ້າມັກຈະຄິດເຖິງພຣະທຳທີ່ພຣະເຢໂຮວາໄດ້ກ່າວເພື່ອສັ່ງສອນຜູ້ຄົນໃນທຸກຂົງເຂດ ແລະ ພຣະທຳທີ່ພຣະເຢຊູເວົ້າເພື່ອຕຳນິຕິຕຽນພວກຟາຣິຊາຍ. ເຖິງແມ່ນພຣະທຳເຫຼົ່ານີ້ຮຸນແຮງ, ພຣະທຳເຫຼົ່ານີ້ກໍບໍ່ແມ່ນຄຳພິພາກສາຂອງພຣະເຈົ້າຕໍ່ມະນຸດ, ເປັນພຽງພຣະທຳທີ່ກ່າວໂດຍພຣະເຈົ້າຢູ່ໃນສະຖານະການທີ່ແຕກຕ່າງກັນ, ນັ້ນກໍຄື ບໍລິບົດທີ່ແຕກຕ່າງກັນ. ພຣະທຳເຫຼົ່ານີ້ບໍ່ຄືພຣະທຳທີ່ໄດ້ກ່າວໂດຍພຣະຄຣິດໃນຍຸກສຸດທ້າຍ ດັ່ງທີ່ພຣະອົງພິພາກສາມະນຸດ. ພຣະຄຣິດແຫ່ງຍຸກສຸດທ້າຍໃຊ້ຄວາມຈິງຫຼາກຫຼາຍຢ່າງເພື່ອສັ່ງສອນມະນຸດ, ເພື່ອເປີດໂປງທາດແທ້ຂອງມະນຸດ ແລະ ວິເຄາະຄຳເວົ້າ ແລະ ການກະທຳຂອງມະນຸດ. ພຣະທຳເຫຼົ່ານີ້ປະກອບດ້ວຍຄວາມຈິງຫຼາຍປະການ, ເຊັ່ນ: ໜ້າທີ່ຂອງມະນຸດ, ວິທີມະນຸດຄວນເຊື່ອຟັງພຣະເຈົ້າ, ວິທີມະນຸດຄວນຈົງຮັກພັກດີຕໍ່ພຣະເຈົ້າ, ວິທີທີ່ມະນຸດຄວນສະແດງຄວາມປະພຶດຕົນແບບມະນຸດປົກກະຕິທົ່ວໄປ ພ້ອມດ້ວຍສະຕິປັນຍາ ແລະ ອຸປະນິໄສຂອງພຣະເຈົ້າ ແລະ ອື່ນໆ. ພຣະທຳເຫຼົ່ານີ້ແມ່ນເນັ້ນໃສ່ທາດແທ້ ແລະ ອຸປະນິໄສທີ່ເສື່ອມຊາມຂອງມະນຸດໂດຍກົງ. ໂດຍສະເພາະແລ້ວ ພຣະທຳທີ່ເປີດໂປງວິທີມະນຸດທີ່ປະຕິເສດພຣະເຈົ້າໃນເລື່ອງທີ່ກ່ຽວກັບວິທີທີ່ມະນຸດເປັນຮູບຮ່າງປາກົດຂອງຊາຕານ ແລະ ເປັນກຳລັງສັດຕູທີ່ຕໍ່ຕ້ານພຣະເຈົ້າ. ໃນການປະຕິບັດພາລະກິດພິພາກສາຂອງພຣະເຈົ້າ, ພຣະອົງບໍ່ພຽງແຕ່ເຮັດໃຫ້ທຳມະຊາດຂອງມະນຸດຊັດເຈນດ້ວຍພຣະທຳສອງສາມຂໍ້ເທົ່ານັ້ນ; ແຕ່ພຣະອົງເປີດໂປງ, ຈັດການ ແລະ ລິຮານມັນໃນໄລຍະຍາວ. ທັງໝົດຂອງວິທີການເປີດໂປງ, ຈັດການ ແລະ ລິຮານທີ່ແຕກຕ່າງກັນເຫຼົ່ານີ້ບໍ່ສາມາດທົດແທນດ້ວຍຄຳກ່າວທຳມະດາ ແຕ່ທົດແທນດ້ວຍຄວາມຈິງທີ່ມະນຸດບໍ່ມີແທ້ໆ. ມີພຽງວິທີການແບບນີ້ເທົ່ານັ້ນຈຶ່ງຖືກເອີ້ນວ່າເປັນການພິພາກສາ; ຜ່ານການພິພາກສາແບບນີ້ເທົ່ານັ້ນ ມະນຸດຈຶ່ງສາມາດຖືກເອົາຊະນະ ແລະ ເຊື່ອໝັ້ນຢ່າງແທ້ຈິງກ່ຽວກັບພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນກໍຮັບເອົາຄວາມຮູ້ທີ່ແທ້ຈິງກ່ຽວກັບ

ພຣະອົງ. ສິ່ງທີ່ພາລະກິດແຫ່ງການພິພາກສານຳມາ ກໍຄືຄວາມເຂົ້າໃຈຂອງມະນຸດຕໍ່ໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ແລະ ຄວາມຈິງກ່ຽວກັບການກະບົດຂອງເຂົາເອງ. ພາລະກິດແຫ່ງການພິພາກສາເຮັດໃຫ້ມະນຸດເຂົ້າໃຈຈຸດປະສົງຂອງພຣະເຈົ້າຫຼາຍຂຶ້ນ, ເຂົ້າໃຈຈຸດປະສົງຂອງພາລະກິດຂອງພຣະອົງ ແລະ ເຂົ້າໃຈເຖິງຄວາມລຶກລັບທີ່ເຂົາບໍ່ອາດສາມາດເຂົ້າໃຈໄດ້. ພາລະກິດດັ່ງກ່າວຍັງສາມາດເຮັດໃຫ້ມະນຸດຮັບຮູ້ ແລະ ຮູ້ຈັກແກ່ນແທ້ທີ່ເສື່ອມຊາມຂອງເຂົາ ແລະ ຕົ້ນຕໍຂອງຄວາມເສື່ອມຊາມຂອງຕົນ ພ້ອມທັງຄົ້ນພົບຄວາມໜ້າລັງກຽດຂອງມະນຸດອີກດ້ວຍ. ຜົນກະທົບເຫຼົ່ານີ້ແມ່ນເກີດຂຶ້ນໂດຍພາລະກິດແຫ່ງການພິພາກສາທັງໝົດ ເພາະວ່າແກ່ນແທ້ຂອງພາລະກິດນີ້ຄືພາລະກິດແຫ່ງການເປີດເຜີຍຄວາມເປັນຈິງ, ຫົນທາງ ແລະ ຊີວິດຂອງພຣະເຈົ້າ ໃຫ້ກັບຜູ້ທີ່ມີຄວາມສັດທາໃນພຣະອົງແທ້ໆ. ພາລະກິດນີ້ແມ່ນພາລະກິດແຫ່ງການພິພາກສາທີ່ພຣະເຈົ້າໄດ້ປະຕິບັດ. ຖ້າເຈົ້າບໍ່ຖືຄວາມຈິງເຫຼົ່ານີ້ວ່າເປັນສິ່ງສຳຄັນ, ຖ້າເຈົ້າຄິດແຕ່ຈະຫຼີກລ້ຽງຈາກຄວາມຈິງນັ້ນຕະຫຼອດ ຫຼື ຄິດຈະຊອກຫາຫົນທາງໃໝ່ທີ່ບໍ່ກ່ຽວພັນກັບຄວາມຈິງນັ້ນ, ແລ້ວເຮົາຂໍເວົ້າວ່າ ເຈົ້າເປັນຄົນບາບໜັກໜາທີ່ສຸດ. ຖ້າເຈົ້າມີຄວາມສັດທາໃນພຣະເຈົ້າ, ແຕ່ບໍ່ສະແຫວງຫາຄວາມຈິງ ຫຼື ຄວາມປະສົງຂອງພຣະເຈົ້າ ຫຼື ເຈົ້າບໍ່ຮັກຫົນທາງທີ່ຈະນຳພາເຈົ້າເຂົ້າໃກ້ພຣະເຈົ້າແລ້ວ, ເຮົາຂໍບອກເຈົ້າວ່າ ເຈົ້າເປັນຄົນທີ່ພະຍາຍາມຫຼີບໜີຄຳພິພາກສາ ແລະ ເຈົ້າຄືຫຸ່ນຕຸກກະຕາ ແລະ ເປັນຄົນທໍລະຍົດທີ່ຫຼີບໜີຈາກບັນລັງຂາວທີ່ຍິ່ງໃຫຍ່. ພຣະເຈົ້າຈະບໍ່ຍົກເວັ້ນຄົນກະບົດຄົນໃດຄົນໜຶ່ງທີ່ຫຼີບໜີຈາກສາຍຕາຂອງພຣະອົງ. ມະນຸດດັ່ງກ່າວຈະໄດ້ຮັບການລົງໂທດຢ່າງຮຸນແຮງຫຼາຍຍິ່ງຂຶ້ນ. ຜູ້ທີ່ມາຢູ່ຕໍ່ໜ້າພຣະເຈົ້າເພື່ອຮັບເອົາການລົງໂທດ ແລະ ຍິ່ງໄປກວ່ານັ້ນກໍຄືເພື່ອໄດ້ຖືກຊຳລະລ້າງໃຫ້ບໍລິສຸດ, ຈະໄດ້ໃຊ້ຊີວິດຢູ່ໃນອານາຈັກຂອງພຣະເຈົ້າຕະຫຼອດໄປ. ແນ່ນອນ, ນີ້ຄືສິ່ງທີ່ຢູ່ໃນອະນາຄົດ.

ພາລະກິດແຫ່ງການພິພາກສາແມ່ນພາລະກິດຂອງພຣະເຈົ້າເອງ, ສະນັ້ນ ໂດຍທຳມະຊາດແລ້ວມັນຕ້ອງຖືກປະຕິບັດໂດຍພຣະເຈົ້າເອງ; ມະນຸດບໍ່ສາມາດປະຕິບັດມັນແທນພຣະເຈົ້າໄດ້. ເພາະວ່າການພິພາກສາແມ່ນການໃຊ້ຄວາມຈິງເພື່ອເອົາຊະນະມະນຸດຊາດ, ແນ່ນອນວ່າພຣະເຈົ້າຈະຍັງປາກົດຢູ່ໃນລັກສະນະທີ່ບັງເກີດເປັນມະນຸດເພື່ອປະຕິບັດພາລະກິດດັ່ງກ່າວນີ້ໃນທ່າມກາງມະນຸດ. ນັ້ນໝາຍຄວາມວ່າ ພຣະຄຣິດແຫ່ງຍຸກສຸດທ້າຍຈະໃຊ້ຄວາມຈິງເພື່ອສອນມະນຸດໃນທົ່ວໂລກ ແລະ ເຮັດໃຫ້ພວກເຂົາຮູ້ຄວາມຈິງທັງໝົດ. ນີ້ແມ່ນພາລະກິດແຫ່ງການພິພາກສາຂອງພຣະເຈົ້າ. ມີຫຼາຍຄົນຮູ້ສຶກບໍ່ດີກ່ຽວກັບການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າ ເພາະວ່າມະນຸດເຫັນວ່າມັນເປັນສິ່ງທີ່ເຊື່ອໄດ້ຍາກທີ່ພຣະເຈົ້າຈະກາຍເປັນມະນຸດເພື່ອປະຕິບັດພາລະກິດແຫ່ງການພິພາກສາ. ເຖິງຢ່າງໃດກໍຕາມ, ເຮົາຕ້ອງບອກເຈົ້າວ່າ ພາລະກິດຂອງພຣະເຈົ້າຢູ່ເໜືອຄວາມຄາດຫວັງຂອງມະນຸດຫຼາຍ ແລະ ຍາກທີ່ຄວາມຄິດຂອງມະນຸດຈະຍອມຮັບໄດ້. ຍ້ອນວ່າຜູ້ຄົນເປັນພຽງໂຕໜອນຢູ່ເທິງແຜ່ນດິນໂລກ ໃນຂະນະທີ່ພຣະເຈົ້າເປັນຜູ້ຍິ່ງໃຫຍ່ທີ່ຄອບຄອງຈັກກະວານ; ຄວາມຄິດຂອງມະນຸດເປັນຄືກັບບວກນ້ຳເນົ່າເໝັນທີ່ເປັນພຽງບໍ່ເກີດຂອງໜອນເທົ່ານັ້ນ, ໃນຂະນະທີ່ແຕ່ລະຂັ້ນຕອນຂອງພາລະກິດທີ່ຖືກນຳພາໂດຍຄວາມຄິດຂອງພຣະເຈົ້າຄືໝາກຜົນແຫ່ງສະຕິປັນຍາຂອງພຣະເຈົ້າ. ຜູ້ຄົນພະຍາຍາມທີ່ຈະ

ແຂ່ງຂັນກັບພຣະເຈົ້າຢູ່ຕະຫຼອດ ເຊິ່ງເຮົາບອກວ່າມັນເຫັນຊັດໃນຕົວມັນເອງວ່າ ຜູ້ໃດຈະທົນທຸກກັບຄວາມສູນເສຍໃນທີ່ສຸດ. ເຮົາຂໍແນະນຳພວກເຈົ້າທຸກຄົນ ບໍ່ຄວນຄິດວ່າຕົນເອງມີຄ່າຫຼາຍໄປກວ່າທອງຄຳ. ຖ້າຄົນອື່ນສາມາດຮັບເອົາຄຳພິພາກສາຂອງພຣະເຈົ້າ ແລ້ວເປັນຫຍັງເຈົ້າຈຶ່ງບໍ່ສາມາດຮັບເອົາຄຳພິພາກສາຂອງພຣະອົງ? ເຈົ້າຢືນສູງກວ່າຄົນອື່ນຫຼາຍປານໃດ? ຖ້າຄົນອື່ນສາມາດກົ້ມຫົວລົງຕໍ່ໜ້າຄວາມເປັນຈິງ ແລ້ວເປັນຫຍັງເຈົ້າຈຶ່ງບໍ່ສາມາດເຮັດຄືຜູ້ຄົນດັ່ງກ່າວນັ້ນໄດ້? ພາລະກິດຂອງພຣະເຈົ້າມີແຮງຜັກດັນທີ່ບໍ່ສາມາດຢຸດຢັ້ງໄດ້. ພຣະອົງຈະບໍ່ປະຕິບັດຊໍ້າພາລະກິດແຫ່ງການພິພາກສາເພື່ອເຫັນແກ່ "ຄວາມດີ" ທີ່ເຈົ້າໄດ້ສ້າງ ແລະ ເຈົ້າກໍຈະເຕັມໄປດ້ວຍຄວາມເສຍໃຈທີ່ປ່ອຍໃຫ້ໂອກາດດີດັ່ງກ່າວນັ້ນຫຼຸດໄປ. ຖ້າເຈົ້າບໍ່ເຊື່ອພຣະທຳຂອງເຮົາ ແລ້ວຈົ່ງລໍຖ້າໃຫ້ບັນລັງຂາວທີ່ຍິ່ງໃຫຍ່ໃນທ້ອງຟ້າຕັດສິນລົງໂທດເຈົ້າ! ເຈົ້າຕ້ອງຮູ້ໄວ້ວ່າ ຊາວອິດສະຣາເອນທຸກຄົນໄດ້ກຽດຊັງ ແລະ ປະຕິເສດພຣະເຢຊູ, ແຕ່ເຖິງຢ່າງນັ້ນກໍຕາມ ຄວາມຈິງຂອງການທີ່ພຣະເຢຊູໄຖ່ບາບມະນຸດຍັງຂະຫຍາຍໄປທົ່ວຈັກກະວານ ແລະ ໄປຈົນສຸດແຜ່ນດິນໂລກ. ແລ້ວນີ້ບໍ່ແມ່ນຄວາມເປັນຈິງທີ່ພຣະເຈົ້າໄດ້ສ້າງມາແຕ່ດົນນານບໍ? ຖ້າເຈົ້າຍັງລໍຖ້າພຣະເຢຊູຮັບເອົາເຈົ້າໄປສູ່ສະຫວັນ, ເຮົາຂໍເວົ້າວ່າເຈົ້າຄືທ່ອນໄມ້ຕາຍທີ່ແຂງກະດ້າງທ່ອນໜຶ່ງ[ກ]. ພຣະເຢຊູຈະບໍ່ຮັບຮູ້ຜູ້ເຊື່ອຈອມປອມຄືກັບເຈົ້າ ຜູ້ທີ່ບໍ່ຊື່ສັດຕໍ່ຄວາມຈິງ ແລະ ຜູ້ທີ່ສະແຫວງຫາພຽງແຕ່ພອນເທົ່ານັ້ນ. ໃນທາງກົງກັນຂ້າມ, ພຣະອົງຈະບໍ່ສະແດງຄວາມເມດຕາໃນການໂຍນເຈົ້າລົງໄປໃນບຶງໄຟເພື່ອຖືກເຜົາໄໝ້ເປັນເວລາຫຼາຍສິບພັນປີ.

ຕອນນີ້ ເຈົ້າເຂົ້າໃຈແລ້ວບໍ ວ່າສິ່ງໃດຄືການພິພາກສາ ແລະ ສິ່ງໃດຄືຄວາມຈິງ? ຖ້າເຈົ້າໄດ້ເຂົ້າໃຈແລ້ວ, ແລ້ວເຮົາຂໍແນະນຳເຈົ້າໃຫ້ຍອມເຊື່ອຟັງຮັບເອົາການຖືກພິພາກສາ, ບໍ່ດັ່ງນັ້ນ ເຈົ້າຈະບໍ່ໄດ້ມີໂອກາດທີ່ຈະຖືກຍົກຍ້ອງໂດຍພຣະເຈົ້າ ຫຼື ຖືກພຣະອົງນຳພາໄປສູ່ອານາຈັກຂອງພຣະອົງ. ຜູ້ທີ່ພຽງຍອມຮັບເອົາຄຳພິພາກສາ ແຕ່ບໍ່ສາມາດຖືກຊຳລະລ້າງໃຫ້ບໍລິສຸດຈັກເທື່ອ, ນັ້ນກໍຄື ຜູ້ທີ່ຫຼົບໜີໄປໃນທ່າມກາງພາລະກິດແຫ່ງການພິພາກສາ ຈະຖືກລັງກຽດ ແລະ ປະຕິເສດໂດຍພຣະເຈົ້າຕະຫຼອດໄປ. ຄວາມບາບຂອງພວກເຂົາຈະມີຢ່າງຫຼວງຫຼາຍກວ່າ ແລະ ຮ້າຍແຮງກວ່າຄວາມບາບພວກຟາຣີຊາຍ ຍ້ອນວ່າພວກເຂົາໄດ້ທໍລະຍົດພຣະເຈົ້າ ແລະ ເປັນກະບົດຕໍ່ພຣະເຈົ້າ. ຜູ້ຄົນດັ່ງກ່າວ ຜູ້ທີ່ບໍ່ມີສິ່ມຄວນແມ່ນແຕ່ຈະເຮັດບໍລິການ ກໍຈະໄດ້ຮັບການລົງໂທດທີ່ຮ້າຍແຮງຂຶ້ນກວ່າເກົ່າ, ຍິ່ງໄປກວ່ານັ້ນກໍເປັນການລົງໂທດຊົ່ວນິລັນດອນ. ພຣະເຈົ້າຈະບໍ່ຍົກເວັ້ນຄົນທໍລະຍົດ ຜູ້ທີ່ໄດ້ສະແດງຄວາມສັດຊື່ດ້ວຍຄຳເວົ້າ ແຕ່ຕໍ່ມາແມ່ນທໍລະຍົດຕໍ່ພຣະອົງ. ຄົນປະເພດນີ້ຈະໄດ້ຮັບຜົນກຳຜ່ານການລົງໂທດຕໍ່ວິນຍານ, ຈິດໃຈ ແລະ ຮ່າງກາຍ. ແລ້ວນີ້ບໍ່ແມ່ນການເປີດເຜີຍແທ້ຈິງເຖິງອຸປະນິໄສທີ່ຊອບທຳຂອງພຣະເຈົ້າບໍ? ນີ້ບໍ່ແມ່ນຈຸດປະສົງຂອງພຣະເຈົ້າໃນການຕັດສິນລົງໂທດ ແລະ ເປີດເຜີຍເຂົາບໍ? ພຣະເຈົ້າໄດ້ມອບໝາຍທຸກຄົນທີ່ປະຕິບັດຄວາມປະພຶດຊົ່ວຊ້າທຸກປະເພດໃນລະຫວ່າງເວລາແຫ່ງການພິພາກສາໄປສະຖານທີ່ງເຕັມໄປດ້ວຍວິນຍານຊົ່ວ ແລະ ປ່ອຍໃຫ້ວິນຍານຊົ່ວເຫຼົ່ານີ້ທຳລາຍຮ່າງກາຍຝ່າຍເນື້ອໜັງ

ກ ທ່ອນໄມ້ຕາຍ: ສຳນວນພາສາຈີນທີ່ໝາຍເຖິງ "ເກີນຄວາມຊ່ວຍເຫຼືອ".

ຂອງພວກເຂົາຕາມໃຈມັກ ແລະ ຮ່າງກາຍຂອງຜູ້ຄົນເຫຼົ່ານີ້ກໍສິ່ງກິນເໝັນເນົ່າຂອງຊາກສົບ. ສິ່ງດັ່ງກ່າວແມ່ນຜົນກຳທີ່ເໝາະສົມສຳລັບພວກເຂົາ. ພຣະເຈົ້າຈົດບັນທຶກຄວາມບາບທຸກຢ່າງຂອງຜູ້ເຊື່ອຈອມປອມທີ່ບໍ່ຊື່ສັດ, ອັກຄະສາວົກປອມ ແລະ ຜູ້ປະຕິບັດພາລະກິດຈອມປອມ; ຫລັງຈາກນັ້ນ ເມື່ອເຖິງເວລາທີ່ເໝາະສົມ ພຣະອົງຈະໂຍນພວກເຂົາໄປຢູ່ທ່າມກາງວິນຍານທີ່ສົກກະປົກ, ປ່ອຍໃຫ້ວິນຍານທີ່ສົກກະປົກເຫຼົ່ານີ້ເຮັດໃຫ້ຮ່າງກາຍຂອງພວກເຂົາທັງໝົດເປິເປື້ອນຢ່າງຕາມໃຈມັກ ເພື່ອວ່າພວກເຂົາຈະບໍ່ໄດ້ເກີດໃໝ່ອີກຄັ້ງ ແລະ ບໍ່ໄດ້ເຫັນແສງສະຫວ່າງອີກຈັກເທື່ອ. ຜູ້ໜ້າຊື່ໃຈຄົດເຫຼົ່ານັ້ນທີ່ໄດ້ເຮັດບໍລິການໃນໄລຍະເວລາໃດໜຶ່ງ ແຕ່ບໍ່ສາມາດສືບຕໍ່ຈົງຮັກພັກດີເຖິງທີ່ສຸດແມ່ນຖືກພຣະເຈົ້ານັບໃຫ້ຢູ່ກຸ່ມຄົນຊົ່ວຊ້າ ເພື່ອວ່າພວກເຂົາຈະສົມຮູ້ຮ່ວມຄິດກັບຄົນຊົ່ວຊ້າ ແລະ ກາຍເປັນສ່ວນໜຶ່ງຂອງກຸ່ມຄົນທີ່ຂາດລະບຽບວິໄນ; ໃນທີ່ສຸດ ພຣະເຈົ້າຈະທຳລາຍລ້າງພວກເຂົາ. ພຣະເຈົ້າປະຖິ້ມ ແລະບໍ່ສົນໃຈກັບຜູ້ທີ່ບໍ່ເຄີຍມີຄວາມຊື່ສັດຕໍ່ພຣະຄຣິດ ຫຼື ບໍ່ປະກອບສ່ວນຫຍັງດ້ວຍກຳລັງຂອງພວກເຂົາ ແລະ ເມື່ອຍຸກໄດ້ປ່ຽນແປງໄປ ພຣະອົງຈະທຳລາຍລ້າງພວກເຂົາທັງໝົດ. ພວກເຂົາຈະບໍ່ມີຊີວິດຢູ່ເທິງແຜ່ນດິນໂລກອີກຕໍ່ໄປ, ແຮງໄກທີ່ພວກເຂົາຈະໄດ້ຮັບເສັ້ນທາງເຂົ້າສູ່ອານາຈັກຂອງພຣະເຈົ້າ. ຜູ້ທີ່ບໍ່ເຄີຍຈິງໃຈຕໍ່ພຣະເຈົ້າ ແຕ່ຖືກບັງຄັບໂດຍສະຖານະການໃຫ້ປະຕິບັດຕໍ່ພຣະອົງພໍເປັນພິທີ ແມ່ນຈະຖືກນັບໄວ້ກັບຜູ້ຄົນທີ່ເຮັດບໍລິການສຳລັບຄົນຂອງພຣະອົງ. ໃນບັນດາມະນຸດເຫຼົ່ານັ້ນ ມີພຽງຈຳນວນນ້ອຍຄົນທີ່ສາມາດຢູ່ລອດໄດ້ ໃນຂະນະທີ່ຄົນສ່ວນໃຫຍ່ຈະຈິບຫາຍໄປພ້ອມກັບຜູ້ທີ່ໃຫ້ບໍລິການທີ່ບໍ່ໄດ້ມາດຕະຖານ. ໃນທີ່ສຸດແລ້ວ, ພຣະເຈົ້າຈະນຳເອົາທຸກຄົນຜູ້ທີ່ມີຄວາມຄິດອັນໜຶ່ງອັນດຽວກັບພຣະເຈົ້າເຂົ້າສູ່ອານາຈັກຂອງພຣະອົງ ເຊັ່ນ: ຜູ້ຄົນ ແລະ ລູກຊາຍຂອງພຣະເຈົ້າ ແລະ ຄົນທີ່ຖືກກຳນົດໄວ້ລ່ວງໜ້າໂດຍພຣະເຈົ້າໃຫ້ເປັນປະໂລຫິດ. ພວກເຂົາຈະເປັນໝາກຜົນຂອງພາລະກິດຂອງພຣະເຈົ້າ. ແຕ່ສຳລັບຄົນທີ່ບໍ່ສາມາດຖືກຈັດຢູ່ໃນປະເພດທີ່ພຣະເຈົ້າໄດ້ກຳນົດໄວ້, ພວກເຂົາຈະຖືກນັບໃຫ້ຢູ່ທ່າມກາງຜູ້ບໍ່ເຊື່ອ ແລະ ແນ່ນອນ ພວກເຈົ້າສາມາດຈິນຕະນາການໄດ້ເລີຍວ່າ ຜົນຮັບຂອງພວກເຂົາຈະອອກມາແບບໃດ. ເຮົາໄດ້ເວົ້າທຸກສິ່ງທີ່ເຮົາຄວນເວົ້າກັບພວກເຈົ້າໄປແລ້ວ; ເສັ້ນທາງທີ່ພວກເຈົ້າເລືອກແມ່ນທາງເລືອກຂອງພວກເຈົ້າເອງ. ສິ່ງທີ່ພວກເຈົ້າຄວນເຂົ້າໃຈກໍຄື: ພາລະກິດຂອງພຣະເຈົ້າບໍ່ເຄີຍລໍຖ້າສຳລັບຄົນທີ່ບໍ່ສາມາດກ້າວທັນພຣະອົງໄດ້ ແລະ ອຸປະນິໄສຊອບທຳຂອງພຣະເຈົ້າຈະບໍ່ສະແດງຄວາມເມດຕາຕໍ່ມະນຸດຄົນໃດ.

# ເຈົ້າຮູ້ບໍ? ພຣະເຈົ້າໄດ້ກະທຳການອັນຍິ່ງໃຫຍ່ທ່າມກາງມະນຸດ

ຍຸກເກົ່າໄດ້ຜ່ານໄປ ແລະ ຍຸກໃໝ່ໄດ້ມາເຖິງ. ປີແລ້ວປີເລົ່າ ແລະ ມື້ແລ້ວມື້ເລົ່າ, ພຣະເຈົ້າໄດ້ເຮັດພາລະກິດຫຼາຍຢ່າງ. ພຣະອົງໄດ້ເຂົ້າມາໃນໂລກ ແລະ ຫຼັງຈາກນັ້ນກໍ່ຈາກໄປ. ວົງຈອນນີ້ເກີດຂຶ້ນຊໍ້າແລ້ວຊໍ້າອີກຕະຫຼອດຫຼາຍຮຸ່ນຄົນ. ມື້ນີ້ ພຣະເຈົ້າສືບຕໍ່ເຮັດພາລະກິດທີ່ພຣະອົງຕ້ອງເຮັດຄືແຕ່ກ່ອນເຊິ່ງເປັນພາລະກິດທີ່ພຣະອົງຍັງບໍ່ທັນສຳເລັດ ຍ້ອນຈົນມາຮອດທຸກມື້ນີ້ ພຣະອົງຍັງບໍ່ໄດ້ຢຸດພັກ. ນັບຕັ້ງແຕ່ການຊົງສ້າງຈົນຮອດມື້ນີ້, ພຣະເຈົ້າໄດ້ເຮັດພາລະກິດຢ່າງຫຼວງຫຼາຍ. ແຕ່ເຈົ້າຮູ້ບໍວ່າພຣະເຈົ້າໃນປັດຈຸບັນເຮັດພາລະກິດຫຼາຍກວ່າແຕ່ກ່ອນ ແລະ ຂອບເຂດພາລະກິດຂອງພຣະອົງກໍ່ຍິ່ງໃຫຍ່ກວ່າແຕ່ກ່ອນ? ນີ້ຄືເຫດຜົນນີ້ທີ່ເຮົາເວົ້າວ່າພຣະເຈົ້າໄດ້ເຮັດການອັນຍິ່ງໃຫຍ່ທ່າມກາງມະນຸດ. ພາລະກິດທັງໝົດຂອງພຣະເຈົ້າມີຄວາມສຳຄັນຫຼາຍ ບໍ່ວ່າຈະເປັນການກະທຳຕໍ່ມະນຸດ ຫຼື ຕໍ່ພຣະເຈົ້າເອງກໍຕາມຍ້ອນທຸກລາຍການໃນພາລະກິດຂອງພຣະອົງແມ່ນກ່ຽວພັນກັບມະນຸດ.

ຍ້ອນພາລະກິດຂອງພຣະເຈົ້າເປັນສິ່ງທີ່ບໍ່ສາມາດເບິ່ງເຫັນ ຫຼື ສຳຜັດໄດ້, ແຮງໄກທີ່ໂລກຈະເບິ່ງເຫັນໄດ້, ແລ້ວມັນສາມາດເປັນສິ່ງທີ່ຍິ່ງໃຫຍ່ໄດ້ແນວໃດ? ສິ່ງໃດແທ້ໆຈຶ່ງຈະຖືວ່າຍິ່ງໃຫຍ່? ແນ່ນອນບໍ່ມີຜູ້ໃດສາມາດປະຕິເສດໄດ້ວ່າ ໃນພາລະກິດໃຫຍັງກໍ່ຕາມທີ່ພຣະເຈົ້າເຮັດ, ມັນສາມາດຖືວ່າຍິ່ງໃຫຍ່ໄດ້, ແຕ່ເປັນຫຍັງເຮົາຈຶ່ງເວົ້າແບບນີ້ກ່ຽວກັບພາລະກິດທີ່ພຣະເຈົ້າເຮັດໃນມື້ນີ້? ເມື່ອເຮົາເວົ້າວ່າພຣະເຈົ້າໄດ້ກະທຳການອັນຍິ່ງໃຫຍ່, ບໍ່ຕ້ອງສົງໄສເລີຍວ່າ ສິ່ງນີ້ແມ່ນກ່ຽວຂ້ອງກັບຄວາມເລິກລັບຫຼາຍຢ່າງທີ່ມະນຸດຍັງບໍ່ທັນເຂົ້າໃຈ. ໃຫ້ພວກເຮົາເວົ້າເຖິງພວກມັນໃນຕອນນີ້.

ພຣະເຢຊູກຳເນີດໃນຮາງຫຍ້າໃນຍຸກທີ່ບໍ່ສາມາດທົນຮັບການເປັນຢູ່ຂອງພຣະອົງ ແຕ່ເຖິງຢ່າງໃດກໍ່ຕາມ ໂລກບໍ່ສາມາດຂວາງທາງພຣະອົງໄດ້ ແລະ ພຣະອົງໄດ້ອາໄສຢູ່ທ່າມກາງມະນຸດເປັນເວລາສາມສິບສາມປີພາຍໃຕ້ການດູແລຂອງພຣະເຈົ້າ. ໃນຕະຫຼອດເວລາຫຼາຍປີເຫຼົ່ານີ້ທີ່ມີຊີວິດ, ພຣະອົງໄດ້ຜະເຊີນກັບຄວາມຂົມຂື່ນໃນໂລກ ແລະ ຊີມລົດຍາກກັບຊີວິດທີ່ທຸກໃຈເທິງແຜ່ນດິນໂລກ. ພຣະອົງໄດ້ແບກຫາບເອົາພາລະໜັກໃນການຖືກຄຶງເທິງໄມ້ກາງແຂນ ເພື່ອໄຖ່ບາບມະນຸດຊາດທັງປວງ. ພຣະອົງໄດ້ໄຖ່ບາບໃຫ້ຄົນບາບທັງໝົດທີ່ຢູ່ພາຍໃຕ້ອຳນາດຂອງຊາຕານ ແລະ ໃນທີ່ສຸດ ຮ່າງກາຍທີ່ຟື້ນຄືນຊີບຂອງພຣະອົງກໍ່ກັບຄືນສະຖານທີ່ພັກຜ່ອນຂອງພຣະອົງ. ຕອນນີ້ ພາລະກິດໃໝ່ຂອງພຣະອົງໄດ້ເລີ່ມຕົ້ນຂຶ້ນແລ້ວ ແລະ ມັນຍັງເປັນການເລີ່ມຕົ້ນຂອງຍຸກໃໝ່. ພຣະເຈົ້າໄດ້ນຳເອົາຜູ້ທີ່ໄດ້ຮັບການໄຖ່ບາບເຂົ້າໄປສູ່ເຮືອນຂອງພຣະອົງ ເພື່ອເລີ່ມຕົ້ນພາລະກິດແຫ່ງຄວາມລອດພົ້ນ. ໃນຄັ້ງນີ້ ພາລະກິດແຫ່ງຄວາມລອດພົ້ນຈະລະອຽດຖີ່ຖ້ວນກວ່າໃນອະດີດ. ມັນບໍ່ແມ່ນພຣະວິນຍານບໍລິສຸດທີ່ກຳລັງປະຕິບັດພາລະກິດໃນມະນຸດ ເພື່ອເຮັດໃຫ້ເຂົາປ່ຽນແປງດ້ວຍຕົວເຂົາເອງ ຫຼື ມັນບໍ່ແມ່ນຮ່າງກາຍຂອງພຣະເຢຊູທີ່ປາກົດຕົວທ່າມກາງມະນຸດເພື່ອເຮັດພາລະກິດນີ້ ແລະ ຢ່າງໜ້ອຍທີ່ສຸດ ພາລະກິດນີ້ກໍ່ໄດ້ເກີດຂຶ້ນຜ່ານວິທີການອື່ນ. ກົງກັນຂ້າມ, ມັນຄືການທີ່ພຣະເຈົ້າທີ່ບັງເກີດເປັນມະນຸດເຮັດພາລະກິດ ແລະ ກຳລັງຊີ້

ນໍາມັນດ້ວຍພຣະອົງເອງ. ພຣະອົງເຮັດມັນໃນລັກສະນະນີ້ ເພື່ອນໍາພາມະນຸດເຂົ້າສູ່ພາລະກິດໃໝ່. ນີ້ບໍ່ແມ່ນສິ່ງທີ່ຍິ່ງໃຫຍ່ບໍ? ພຣະເຈົ້າບໍ່ໄດ້ເຮັດພາລະກິດນີ້ຜ່ານສ່ວນໜຶ່ງຂອງຄວາມເປັນມະນຸດ ຫຼື ໂດຍວິທີການທໍານາຍ; ກົງກັນຂ້າມ, ພຣະເຈົ້າເຮັດພາລະກິດດ້ວຍພຣະອົງເອງ. ບາງຄົນອາດເວົ້າວ່ານີ້ບໍ່ແມ່ນສິ່ງທີ່ຍິ່ງໃຫຍ່ ແລະ ມັນບໍ່ສາມາດນໍາຄວາມປິຕິຍິນດີມາສູ່ມະນຸດ. ແຕ່ເຮົາຈະເວົ້າກັບເຈົ້າວ່າພາລະກິດຂອງພຣະເຈົ້າບໍ່ແມ່ນສິ່ງນີ້ເທົ່ານັ້ນ, ແຕ່ເປັນສິ່ງທີ່ຍິ່ງໃຫຍ່ກວ່ານີ້ຫຼາຍເທົ່າ.

ໃນຄັ້ງນີ້, ພຣະເຈົ້າໄດ້ມາເພື່ອດໍາເນີນພາລະກິດ ບໍ່ແມ່ນໃນຮ່າງກາຍຝ່າຍພຣະວິນຍານ ແຕ່ໃນຮ່າງກາຍທີ່ທໍາມະດາຫຼາຍ. ຍິ່ງໄປກວ່ານັ້ນ, ມັນບໍ່ແມ່ນເປັນພຽງຮ່າງກາຍຂອງການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າເທົ່ານັ້ນ, ມັນຍັງເປັນຮ່າງກາຍທີ່ພຣະອົງກັບຄືນມາສູ່ເນື້ອໜັງ. ມັນເປັນຮ່າງກາຍທີ່ທໍາມະດາຫຼາຍ. ເຈົ້າບໍ່ສາມາດເຫັນແມ່ນຫຍັງກໍ່ຕາມທີ່ເຮັດໃຫ້ພຣະອົງໂດດເດັ່ນຈາກຄົນອື່ນ, ແຕ່ເຈົ້າສາມາດຮັບເອົາຄວາມຈິງທີ່ບໍ່ເຄີຍໄດ້ຍິນມາກ່ອນຈາກພຣະອົງ. ເນື້ອໜັງທີ່ບໍ່ສໍາຄັນນີ້ເປັນສິ່ງທີ່ຮ່າງກາຍຂອງພຣະທໍາແຫ່ງຄວາມຈິງທັງໝົດຈາກພຣະເຈົ້າ, ດໍາເນີນພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍ ແລະ ສະແດງອຸປະນິໄສທັງໝົດຂອງພຣະເຈົ້າເພື່ອໃຫ້ມະນຸດໄດ້ເຂົ້າໃຈ. ເຈົ້າບໍ່ປາຖະໜາຢ່າງຍິ່ງທີ່ຈະເຫັນພຣະເຈົ້າໃນສະຫວັນບໍ? ເຈົ້າບໍ່ປາຖະໜາຢ່າງຍິ່ງທີ່ຈະເຂົ້າໃຈພຣະເຈົ້າໃນສະຫວັນບໍ? ເຈົ້າບໍ່ໄດ້ປາຖະໜາຢ່າງຍິ່ງທີ່ຈະເຫັນຈຸດໝາຍປາຍທາງຂອງມະນຸດຊາດບໍ? ພຣະອົງຈະບອກຄວາມລັບທັງໝົດນີ້ໃຫ້ແກ່ເຈົ້າ ເຊິ່ງເປັນຄວາມລັບທີ່ບໍ່ມີມະນຸດຄົນໃດສາມາດບອກເຈົ້າ ແລະ ພຣະອົງຍັງຈະບອກເຈົ້າກ່ຽວກັບຄວາມຈິງທີ່ເຈົ້າບໍ່ເຂົ້າໃຈ. ພຣະອົງຄືປະຕູຂອງເຈົ້າສູ່ອານາຈັກ ແລະ ຜູ້ນໍາທາງຂອງເຈົ້າສູ່ຍຸກໃໝ່. ເນື້ອໜັງທີ່ທໍາມະດາດັ່ງກ່າວມີຄວາມເລິກລັບຫຼາຍຢ່າງທີ່ບໍ່ສາມາດຢັ່ງເຖິງໄດ້. ເຈົ້າອາດບໍ່ຢັ່ງເຖິງການກະທໍາຂອງພຣະອົງໄດ້, ແຕ່ເປົ້າໝາຍທັງໝົດໃນພາລະກິດທີ່ພຣະອົງເຮັດກໍ່ພຽງພໍທີ່ຈະເຮັດໃຫ້ເຈົ້າເຫັນວ່າພຣະອົງບໍ່ໄດ້ເປັນເນື້ອໜັງທີ່ທໍາມະດາດັ່ງທີ່ຜູ້ຄົນເຊື່ອ. ຍ້ອນພຣະອົງເປັນຕົວແທນໃຫ້ແກ່ຄວາມປະສົງຂອງພຣະເຈົ້າ ແລະ ການດູແລທີ່ພຣະເຈົ້າສະແດງອອກຕໍ່ມະນຸດຊາດໃນຍຸກສຸດທ້າຍ. ເຖິງແມ່ນວ່າເຈົ້າບໍ່ສາມາດໄດ້ຍິນ, ພຣະທໍາຂອງພຣະອົງກໍ່ເບິ່ງຄືກັບວ່າກໍາລັງສັ່ນສະເທືອນສະຫວັນ ແລະ ແຜ່ນດິນໂລກ, ເຖິງແມ່ນວ່າເຈົ້າບໍ່ສາມາດເຫັນສາຍຕາຂອງພຣະອົງເປັນແຟວໄຟ ແລະ ເຖິງແມ່ນວ່າເຈົ້າບໍ່ສາມາດຮັບເອົາການລົງວິໄນຈາກທ່ອນເລັກຂອງພຣະອົງ, ເຖິງແມ່ນວ່າເຈົ້າສາມາດໄດ້ຍິນຈາກພຣະທໍາຂອງພຣະອົງວ່າພຣະເຈົ້າໂກດຮ້າຍ ແລະ ຮູ້ວ່າພຣະເຈົ້າກໍາລັງສະແດງຄວາມສົງໄສສໍາລັບມະນຸດຊາດ; ເຈົ້າສາມາດເຫັນອຸປະນິໄສທີ່ຊອບທໍາຂອງພຣະເຈົ້າ ແລະ ສະຕິປັນຍາຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ເຈົ້າຮັບຮູ້ເຖິງຄວາມຫ່ວງໃຍຂອງພຣະເຈົ້າສໍາລັບມະນຸດຊາດທັງປວງ. ພາລະກິດຂອງພຣະເຈົ້າໃນຍຸກສຸດທ້າຍແມ່ນການອະນຸຍາດໃຫ້ມະນຸດເຫັນພຣະເຈົ້າໃນສະຫວັນທີ່ດໍາລົງຊີວິດຢູ່ທ່າມກາງມະນຸດເທິງໂລກ ແລະ ເຮັດໃຫ້ມະນຸດສາມາດຮູ້ຈັກ, ເຊື່ອຟັງ, ຢໍາເກງ ແລະ ຮັກພຣະເຈົ້າ. ນີ້ຄືເຫດຜົນທີ່ພຣະອົງໄດ້ກັບຄືນມາເປັນເນື້ອໜັງເປັນຄັ້ງທີສອງ. ເຖິງແມ່ນວ່າສິ່ງທີ່ມະນຸດເຫັນໃນມື້ນີ້ຄືພຣະເຈົ້າທີ່ເປັນຄືກັນກັບມະນຸດ, ພຣະເຈົ້າທີ່ມີດັງ ແລະ ຕາສອງເບື້ອງ ແລະ ເປັນພຣະເຈົ້າທີ່ບໍ່ໄດ້ໂດດເດັ່ນ, ໃນທີ່ສຸດແລ້ວ ພຣະເຈົ້າກໍ່ຈະສະແດງໃຫ້ພວກເຈົ້າເຫັນວ່າ ຖ້າມະນຸດຄົນນີ້ບໍ່ມີຊີວິດຢູ່,

ສະຫວັນ ແລະ ໂລກກໍ່ຈະຜ່ານການປ່ຽນແປງຢ່າງໃຫຍ່ຫຼວງ; ຖ້າມະນຸດຄົນນີ້ບໍ່ມີຊີວິດຢູ່, ສະຫວັນກໍ່ຈະມືດລົງ, ໂລກກໍ່ຈະຈົມລົງສູ່ຄວາມວຸ້ນວາຍ ແລະ ມະນຸດຊາດທັງປວງກໍ່ຈະດຳລົງຊີວິດທ່າມກາງໄພອຶດຢາກ ແລະ ໂຣກລະບາດ. ພຣະອົງກໍ່ຈະສະແດງໃຫ້ພວກເຈົ້າເຫັນວ່າ ຖ້າພຣະເຈົ້າທີ່ບັງເກີດເປັນມະນຸດບໍ່ມາເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນໃນຍຸກສຸດທ້າຍ, ແລ້ວພຣະເຈົ້າຄົງຈະທຳລາຍມະນຸດຊາດທັງປວງໃນນະຮົກຕັ້ງແຕ່ດົນມາແລ້ວ; ຖ້າເນື້ອໜັງນີ້ບໍ່ມີຢູ່, ແລ້ວພວກເຈົ້າກໍ່ຈະເປັນຄົນບາບໜາຕະຫຼອດໄປ ແລະ ພວກເຈົ້າຈະເປັນຊາກສົບຕະຫຼອດໄປ. ພວກເຈົ້າຄວນຮູ້ໄວ້ວ່າ ຖ້າເນື້ອໜັງນີ້ບໍ່ມີຊີວິດຢູ່, ມະນຸດຊາດທັງປວງກໍ່ຈະປະສົບກັບຄວາມຫາຍະນະທີ່ບໍ່ສາມາດຫຼີບຫຼີກໄດ້ ແລະ ພົບວ່າມັນເປັນໄປບໍ່ໄດ້ທີ່ຈະຫຼົບໜີການລົງໂທດທີ່ຮ້າຍແຮງຍິ່ງຂຶ້ນທີ່ພຣະເຈົ້າຕັດສິນໃຫ້ເກີດຂຶ້ນຕໍ່ມະນຸດຊາດໃນຍຸກສຸດທ້າຍ. ຖ້າເນື້ອໜັງທີ່ທຳມະດານີ້ບໍ່ໄດ້ກຳເນີດ, ພວກເຈົ້າທຸກຄົນກໍ່ຈະຢູ່ໃນສະພາວະທີ່ພວກເຈົ້າຂໍຊີວິດ ໂດຍທີ່ບໍ່ສາມາດດຳລົງຊີວິດ ແລະ ອະທິຖານຫາຄວາມຕາຍໂດຍທີ່ບໍ່ສາມາດຕາຍ; ຖ້າເນື້ອໜັງນີ້ບໍ່ມີຊີວິດຢູ່, ແລ້ວພວກເຈົ້າກໍ່ຈະບໍ່ສາມາດຮັບເອົາຄວາມຈິງ ແລະ ມາຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າໃນມື້ນີ້ ແຕ່ກົງກັນຂ້າມ ພວກເຈົ້າຈະຖືກພຣະເຈົ້າລົງໂທດ ຍ້ອນຄວາມຜິດບາບທີ່ຮ້າຍແຮງຂອງພວກເຈົ້າ. ພວກເຈົ້າຮູ້ບໍວ່າ ຖ້າບໍ່ແມ່ນຍ້ອນການທີ່ພຣະເຈົ້າກັບຄືນມາສູ່ເນື້ອໜັງ, ບໍ່ມີຜູ້ໃດຈະມີໂອກາດໄດ້ຮັບຄວາມລອດພົ້ນ; ແລະ ຖ້າບໍ່ແມ່ນຍ້ອນການມາເຖິງຂອງເນື້ອໜັງນີ້, ພຣະເຈົ້າກໍ່ຈະນຳການສິ້ນສຸດມາສູ່ຍຸກເດີມຕັ້ງແຕ່ດົນແລ້ວ? ເມື່ອເປັນແບບນີ້, ພວກເຈົ້າຍັງສາມາດປະຕິບັດການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າບໍ? ຍ້ອນພວກເຈົ້າສາມາດໄດ້ຮັບຜົນປະໂຫຍດຫຼາຍຢ່າງຈາກມະນຸດທີ່ທຳມະດາຄົນນີ້, ເປັນຫຍັງພວກເຈົ້າຈຶ່ງບໍ່ຍອມຮັບພຣະອົງຢ່າງຍິນດີ?

ພາລະກິດຂອງພຣະເຈົ້າເປັນສິ່ງທີ່ເຈົ້າບໍ່ສາມາດເຂົ້າໃຈໄດ້. ຖ້າເຈົ້າບໍ່ສາມາດເຂົ້າໃຈຢ່າງສົມບູນວ່າທາງເລືອກຂອງເຈົ້າຖືກຕ້ອງ ຫຼື ບໍ່ ຫຼື ເຈົ້າບໍ່ສາມາດຮູ້ໄດ້ວ່າພາລະກິດຂອງພຣະເຈົ້າສາມາດສຳເລັດໄດ້ ຫຼື ບໍ່, ແລ້ວເປັນຫຍັງເຈົ້າຈຶ່ງບໍ່ລອງສ່ຽງເບິ່ງ ແລະ ເບິ່ງວ່າມະນຸດທີ່ທຳມະດາຄົນນີ້ຈະເປັນປະໂຫຍດຫຼາຍຕໍ່ຕົວເຈົ້າ ຫຼື ບໍ່ ແລະ ພຣະເຈົ້າໄດ້ທຳການອັນຍິ່ງໃຫຍ່ແທ້ໆ ຫຼື ບໍ່? ເຖິງຢ່າງໃດກໍ່ຕາມ, ເຮົາຕ້ອງບອກເຈົ້າວ່າ ໃນເວລາຂອງໂນອາ, ມະນຸດກິນ ແລະ ດື່ມ, ແຕ່ງດອງ ແລະ ຍິນຍອມແຕ່ງດອງຈົນເຖິງຂັ້ນທີ່ພຣະເຈົ້າທົນເບິ່ງບໍ່ໄດ້, ສະນັ້ນ ພຣະອົງຈຶ່ງສົ່ງນໍ້າຖ້ວມຄັ້ງໃຫຍ່ມາເພື່ອທຳລາຍມະນຸດຊາດ, ເວັ້ນໄວ້ແຕ່ຄອບຄົວຂອງໂນອາທີ່ມີແປດຄົນ ແລະ ສັດປີກ ແລະ ສັດປ່າທຸກຊະນິດ. ເຖິງຢ່າງໃດກໍ່ຕາມໃນຍຸກສຸດທ້າຍ, ຄົນທີ່ພຣະເຈົ້າໄດ້ເວັ້ນໄວ້ນັ້ນລ້ວນແລ້ວແຕ່ເປັນຄົນທີ່ຈົງຮັກພັກດີຕໍ່ພຣະອົງຈົນເຖິງທີ່ສຸດ. ເຖິງແມ່ນວ່າທັງສອງຍຸກຈະເປັນເວລາທີ່ມີຄວາມເສື່ອມຊາມຫຼາຍຈົນພຣະເຈົ້າບໍ່ສາມາດທົນເບິ່ງໄດ້ ແລະ ມະນຸດຊາດໃນທັງສອງຍຸກກໍ່ເສື່ອມຊາມຫຼາຍ ແລະ ປະຕິເສດວ່າພຣະເຈົ້າເປັນພຣະຜູ້ເປັນເຈົ້າຂອງພວກເຂົາ, ພຣະເຈົ້າໄດ້ທຳລາຍພຽງແຕ່ຄົນໃນເວລາຂອງໂນອາ. ມະນຸດຊາດໃນທັງສອງຍຸກໄດ້ເຮັດໃຫ້ພຣະເຈົ້າເສຍໃຈຫຼາຍ ແຕ່ພຣະເຈົ້າກໍ່ຍັງອົດທົນກັບມະນຸດໃນຍຸກສຸດທ້າຍຈົນຮອດຕອນນີ້. ເປັນຫຍັງຈຶ່ງເປັນແນວນີ້? ພວກເຈົ້າບໍ່ເຄີຍສົງໄສບໍວ່າເປັນຫຍັງ? ຖ້າພວກເຈົ້າບໍ່ຮູ້ແທ້ໆ ແລ້ວເຮົາຈະບອກພວກເຈົ້າ. ເຫດຜົນທີ່ພຣະເຈົ້າສະແດງຄວາມກະລຸນາຕໍ່ມະນຸດໃນຍຸກສຸດທ້າຍບໍ່ແມ່ນເພາະ

ພວກເຂົາເສື່ອມຊາມໜ້ອຍກວ່າຄົນໃນເວລາຂອງໂນອາ ຫຼື ພວກເຂົາກັບໃຈມາຫາພຣະເຈົ້າ, ແຮງໄກທີ່ຈະເປັນຍ້ອນວ່າເຕັກໂນໂລຊີໃນຍຸກສຸດທ້າຍກ້າວໜ້າຫຼາຍຈົນພຣະເຈົ້າບໍ່ສາມາດຕັດສິນໃຈທຳລາຍພວກເຂົາໄດ້. ກົງກັນຂ້າມ, ມັນເປັນຍ້ອນວ່າພຣະເຈົ້າມີພາລະກິດທີ່ຕ້ອງເຮັດໃນຄົນກຸ່ມໜຶ່ງໃນຍຸກສຸດທ້າຍ ແລະ ພຣະເຈົ້າຈະເຮັດພາລະກິດນີ້ດ້ວຍພຣະອົງເອງໃນການບັງເກີດເປັນມະນຸດຂອງພຣະອົງ. ຍິ່ງໄປກວ່ານັ້ນ, ພຣະເຈົ້າຈະເລືອກເອົາສ່ວນໜຶ່ງຂອງຄົນກຸ່ມນີ້ໃຫ້ເປັນເປົ້າໝາຍໃນຄວາມລອດພົ້ນຂອງພຣະອົງ ແລະ ໝາກຜົນໃນແຜນການຄຸ້ມຄອງຂອງພຣະອົງ ແລະ ນຳຜູ້ຄົນເຫຼົ່ານີ້ໄປສູ່ຍຸກໃໝ່. ດັ່ງນັ້ນ ບໍ່ວ່າຫຍັງກໍ່ຕາມ, ລາຄານີ້ທີ່ພຣະເຈົ້າໄດ້ຈ່າຍກໍ່ເປັນການກະກຽມສຳລັບພາລະກິດທີ່ເນື້ອໜັງທີ່ບັງເກີດເປັນມະນຸດຂອງພຣະອົງຈະເຮັດໃນຍຸກສຸດທ້າຍທັງສິ້ນ. ຂໍ້ແທ້ຈິງທີ່ພວກເຈົ້າໄດ້ມາເຖິງມື້ນີ້ກໍ່ເນື່ອງຈາກເນື້ອໜັງນີ້. ມັນເປັນເພາະພຣະເຈົ້າດຳລົງຊີວິດໃນເນື້ອໜັງ ພວກເຈົ້າຈຶ່ງມີໂອກາດລອດຊີວິດ. ຄວາມໂຊກດີທັງໝົດນີ້ແມ່ນໄດ້ຮັບຍ້ອນມະນຸດທີ່ທຳມະດາຄົນນີ້. ບໍ່ແມ່ນພຽງເທົ່ານີ້, ແຕ່ໃນທີ່ສຸດ ທຸກຊົນຊາດຈະນະມັດສະການມະນຸດທີ່ທຳມະດາຄົນນີ້ ພ້ອມທັງຂອບໃຈ ແລະ ເຊື່ອຟັງມະນຸດທີ່ບໍ່ສຳຄັນຄົນນີ້, ເພາະມັນຄືຄວາມຈິງ, ຊີວິດ ແລະ ຫົນທາງທີ່ພຣະອົງໄດ້ນຳມາ ເຊິ່ງຊ່ວຍມະນຸດຊາດທັງປວງ, ບັນເທົາຂໍ້ຂັດແຍ້ງລະຫວ່າງມະນຸດ ແລະ ພຣະເຈົ້າ, ເຮັດໃຫ້ໄລຍະທາງລະຫວ່າງພວກເຂົາສັ້ນລົງ ແລະ ເປີດຄວາມເຊື່ອມໂຍງລະຫວ່າງຄວາມຄິດຂອງພຣະເຈົ້າ ແລະ ມະນຸດ. ມັນເປັນພຣະອົງທີ່ໄດ້ຮັບສະຫງ່າລາສີຫຼາຍຂຶ້ນສຳລັບພຣະເຈົ້າ. ມະນຸດທີ່ທຳມະດາຄົນນີ້ບໍ່ສົມຄວນແກ່ຄວາມໄວ້ວາງໃຈ ແລະ ການເຄົາລົບບູຊາຂອງເຈົ້າບໍ? ເນື້ອໜັງທີ່ທຳມະດາດັ່ງກ່າວບໍ່ເໝາະສົມທີ່ຈະຖືກເອີ້ນວ່າພຣະຄຣິດບໍ? ຄົນທຳມະດາເຊັ່ນນັ້ນຈະບໍ່ສາມາດກາຍມາເປັນການສະແດງອອກຂອງພຣະເຈົ້າໃນທ່າມກາງມະນຸດບໍ? ມະນຸດຄົນດັ່ງກ່າວທີ່ໄດ້ເອົາຊີວິດມະນຸດຊາດຈາກໄພພິບັດບໍ່ສົມຄວນໄດ້ຮັບຄວາມຮັກຂອງພວກເຈົ້າ ແລະ ຄວາມປາຖະໜາຂອງພວກເຂົາທີ່ຈະຍຶດຖືພຣະອົງບໍ? ຖ້າພວກເຈົ້າປະຕິເສດຄວາມຈິງທີ່ກ່າວອອກຈາກປາກຂອງພຣະອົງ ແລະ ລັງກຽດການເປັນຢູ່ຂອງພຣະອົງທ່າມກາງພວກເຈົ້າ, ແລ້ວແມ່ນຫຍັງຈະເກີດຂຶ້ນກັບພວກເຈົ້າໃນທີ່ສຸດ?

ພາລະກິດທັງໝົດຂອງພຣະເຈົ້າໃນຍຸກສຸດທ້າຍເກີດຂຶ້ນຜ່ານມະນຸດທຳມະດາຄົນນີ້. ພຣະອົງຈະປະທານທຸກສິ່ງໃຫ້ແກ່ເຈົ້າ ແລະ ຍິ່ງໄປກວ່ານັ້ນ ພຣະອົງຈະສາມາດຕັດສິນທຸກສິ່ງທີ່ກ່ຽວຂ້ອງກັບເຈົ້າ. ມະນຸດແບບນີ້ຈະສາມາດເປັນດັ່ງທີ່ພວກເຈົ້າເຊື່ອວ່າພຣະອົງເປັນບໍ: ເປັນມະນຸດທີ່ທຳມະດາຫຼາຍທີ່ບໍ່ສົມຄວນຖືກກ່າວເຖິງ? ຄວາມຈິງຂອງພຣະອົງບໍ່ພຽງພໍທີ່ຈະເຮັດໃຫ້ພວກເຈົ້າເຊື່ອໝັ້ນບໍ? ການເປັນພະຍານເຖິງການກະທຳຂອງພຣະອົງບໍ່ພຽງພໍທີ່ຈະເຮັດໃຫ້ພວກເຈົ້າເຊື່ອໝັ້ນບໍ? ຫຼື ເສັ້ນທາງທີ່ພຣະອົງນຳມາບໍ່ສົມຄວນໃຫ້ພວກເຈົ້າໄດ້ຍ່າງບໍ? ເມື່ອໄດ້ເວົ້າ ແລະ ເຮັດທຸກສິ່ງແລ້ວ, ແມ່ນຫຍັງທີ່ເຮັດໃຫ້ພວກເຈົ້າກຽດຊັງພຣະອົງ ແລະ ໂຍນພຣະອົງອອກໄປ ແລະ ມອບບ່ອນນອນທີ່ກວ້າງໃຫ້ພຣະອົງ? ນັ້ນຄືມະນຸດຄົນນີ້ທີ່ສະແດງຄວາມຈິງ, ນັ້ນຄືມະນຸດຄົນທີ່ໃຫ້ຄວາມຈິງ ແລະ ນັ້ນຄືມະນຸດຄົນນີ້ທີ່ມອບເສັ້ນທາງໃຫ້ພວກເຈົ້າໄດ້ຕິດຕາມ. ມັນເປັນໄປໄດ້ບໍວ່າພວກເຈົ້າຍັງບໍ່ສາມາດຄົ້ນພົບຮ່ອງຮອຍໃນພາລະກິດຂອງພຣະເຈົ້າພາຍໃນຄວາມຈິງເຫຼົ່ານີ້? ຖ້າບໍ່ມີພາລະກິດຂອງພຣະເຢຊູ,

ມະນຸດຊາດຈະບໍ່ສາມາດລົງມາຈາກໄມ້ກາງແຂນ, ແຕ່ຖ້າບໍ່ມີການບັງເກີດເປັນມະນຸດໃນມື້ນີ້ ຄົນທີ່ລົງມາຈາກໄມ້ກາງແຂນຈະບໍ່ສາມາດໄດ້ຮັບການຮອງຮັບຈາກພຣະເຈົ້າ ຫຼື ເຂົ້າສູ່ຍຸກໃໝ່ຈັກເທື່ອ. ຖ້າບໍ່ມີການມາເຖິງຂອງມະນຸດທີ່ທຳມະດາຄົນນີ້, ພວກເຈົ້າຈະບໍ່ມີໂອກາດໄດ້ເຫັນໃບໜ້າທີ່ແທ້ຈິງຂອງພຣະເຈົ້າ ຫຼື ພວກເຈົ້າຈະບໍ່ມີຄຸນສົມບັດທີ່ຈະໄດ້ເຫັນ, ຍ້ອນພວກເຈົ້າທຸກຄົນເປັນສິ່ງຂອງທີ່ຄວນຖືກທຳລາຍຕັ້ງແຕ່ດົນແລ້ວ. ຍ້ອນການມາເຖິງຂອງການບັງເກີດເປັນມະນຸດຄັ້ງທີສອງຂອງພຣະເຈົ້າ, ພຣະເຈົ້າໄດ້ໃຫ້ອະໄພພວກເຈົ້າ ແລະ ສະແດງຄວາມເມດຕາໃຫ້ແກ່ພວກເຈົ້າ. ເຖິງຢ່າງໃດກໍ່ຕາມ, ພຣະທຳທີ່ເຮົາຕ້ອງປະໄວ້ໃຫ້ແກ່ພວກເຈົ້າໃນຕອນສຸດທ້າຍກໍ່ຍັງເປັນສິ່ງເຫຼົ່ານີ້: ມະນຸດທີ່ທຳມະດາຄົນນີ້ ເຊິ່ງເປັນພຣະເຈົ້າທີ່ບັງເກີດເປັນມະນຸດ ແມ່ນມີຄວາມສຳຄັນຢ່າງຍິ່ງຕໍ່ພວກເຈົ້າ. ນີ້ຄືສິ່ງທີ່ຍິ່ງໃຫຍ່ທີ່ພຣະເຈົ້າໄດ້ເຮັດທ່າມກາງມະນຸດແລ້ວ.

# ມີພຽງແຕ່ພຣະຄຣິດແຫ່ງຍຸກສຸດທ້າຍເທົ່ານັ້ນ ທີ່ສາມາດມອບຫົນທາງແຫ່ງຊີວິດ ຊົ່ວນິດນິລັນໃຫ້ກັບມະນຸດໄດ້

ຫົນທາງແຫ່ງຊີວິດບໍ່ແມ່ນສິ່ງທີ່ຄົນໃດກໍສາມາດມີໄດ້ ຫຼື ມັນບໍ່ແມ່ນສິ່ງທີ່ຄົນໃດກໍສາມາດໄດ້ຮັບຢ່າງງ່າຍດາຍ. ນີ້ກໍຍ້ອນວ່າຊີວິດແມ່ນສາມາດມາຈາກພຣະເຈົ້າເທົ່ານັ້ນ ເຊິ່ງເວົ້າໄດ້ວ່າ ມີພຽງພຣະເຈົ້າເອງທີ່ມີແກ່ນແທ້ຂອງຊີວິດ ແລະ ມີພຽງພຣະເຈົ້າເອງທີ່ມີຫົນທາງແຫ່ງຊີວິດ. ດ້ວຍເຫດນັ້ນ ມີພຽງພຣະເຈົ້າທີ່ເປັນບໍ່ເກີດແຫ່ງຊີວິດ ແລະ ເປັນບໍ່ນໍ້າທີ່ມີນໍ້າແຫ່ງຊີວິດຫຼັ່ງໄຫຼຢູ່ຕະຫຼອດເວລາ. ນັບຕັ້ງແຕ່ພຣະອົງສ້າງແຜ່ນດິນໂລກ, ພຣະເຈົ້າໄດ້ປະຕິບັດພາລະກິດຫຼາຍຢ່າງທີ່ກ່ຽວຂ້ອງກັບພະລັງແຫ່ງຊີວິດ, ປະຕິບັດພາລະກິດຫຼາຍຢ່າງທີ່ນໍາຊີວິດມາສູ່ມະນຸດ ແລະ ເສຍສະລະຫຼາຍເພື່ອມະນຸດອາດຈະໄດ້ຮັບຊີວິດ. ນີ້ກໍຍ້ອນວ່າພຣະເຈົ້າເອງເປັນຊີວິດຊົ່ວນິດນິລັນ ແລະ ພຣະເຈົ້າເອງເປັນຫົນທາງແຫ່ງການຟື້ນຟູຊີວິດຂອງມະນຸດ. ພຣະເຈົ້າບໍ່ເຄີຍຂາດໄປຈາກຫົວໃຈຂອງມະນຸດຈັກເທື່ອ ແລະ ພຣະອົງອາໄສຢູ່ທ່າມກາງມະນຸດຕະຫຼອດເວລາ. ພຣະອົງໄດ້ເປັນກໍາລັງຜັກດັນໃນການດໍາລົງຊີວິດຂອງມະນຸດ, ເປັນຮາກຖານໃຫ້ກັບການມີຊີວິດຢູ່ຂອງມະນຸດ ແລະ ເປັນແຫຼ່ງທີ່ອຸດົມສົມບູນສໍາລັບການມີຊີວິດຢູ່ຂອງມະນຸດຫຼັງຈາກການກໍາເນີດ. ພຣະອົງເຮັດໃຫ້ມະນຸດເກີດຂຶ້ນໃໝ່ ແລະ ເຮັດໃຫ້ມະນຸດສາມາດດໍາລົງໃນທຸກບົດບາດຂອງຊີວິດຂອງເຂົາຢ່າງໜຽວແໜ້ນ. ຍ້ອນອໍານາດຂອງພຣະອົງ ແລະ ພະລັງຊີວິດທີ່ບໍ່ສາມາດດັບສູນໄດ້ຂອງພຣະອົງ, ມະນຸດຈຶ່ງສາມາດດໍາລົງຊີວິດສືບຕໍ່ຈາກຮຸ່ນສູ່ຮຸ່ນ ເຊິ່ງພະລັງແຫ່ງຊີວິດຂອງພຣະເຈົ້າເປັນຮາກຖານໃນການມີຊີວິດຢູ່ຂອງມະນຸດ ແລະ ພຣະເຈົ້າໄດ້ເສຍສະລະໃນສິ່ງທີ່ບໍ່ມີມະນຸດທໍາມະດາຄົນໃດເຄີຍເສຍສະລະມາກ່ອນ. ພະລັງແຫ່ງຊີວິດຂອງພຣະເຈົ້າສາມາດເອົາຊະນະເໜືອລິດອໍານາດທັງປວງ; ນອກຈາກນັ້ນ ມັນຍັງຍິ່ງໃຫຍ່ກວ່າລິດອໍານາດໃດໆທັງປວງ. ຊີວິດຂອງພຣະອົງເປັນຢູ່ຊົ່ວນິດນິລັນ, ລິດອໍານາດຂອງພຣະອົງເໜືອທໍາມະຊາດ ແລະ ພະລັງແຫ່ງຊີວິດຂອງພຣະອົງບໍ່ສາມາດຖືກເອົາຊະນະໄດ້ໂດຍສິ່ງທີ່ຖືກສ້າງ ຫຼື ກໍາລັງໃດໆຂອງສັດຕູ. ພະລັງແຫ່ງຊີວິດຂອງພຣະເຈົ້າມີຢູ່ ແລະ ສ່ອງແສງເປັ່ງປະກາຍໄປທົ່ວ ບໍ່ວ່າຈະເປັນເວລາ ຫຼື ສະຖານທີ່ໃດກໍຕາມ. ສະຫວັນ ແລະ ແຜ່ນດິນໂລກອາດໄດ້ຜ່ານການປ່ຽນແປງຢ່າງໃຫຍ່ຫຼວງ, ແຕ່ຊີວິດຂອງພຣະເຈົ້າຢູ່ຄືເກົ່າຕະຫຼອດໄປ. ທຸກສິ່ງທຸກຢ່າງຈາກໄປ ແຕ່ຊີວິດຂອງພຣະເຈົ້າຍັງຄົງຢູ່ ຍ້ອນພຣະເຈົ້າເປັນບໍ່ເກີດແຫ່ງການມີຊີວິດຢູ່ຂອງທຸກຢ່າງ ແລະ ຮາກຖານຂອງການມີຊີວິດຢູ່ຂອງພວກມັນ. ຊີວິດຂອງມະນຸດເກີດມາຈາກພຣະເຈົ້າ, ການມີຢູ່ຂອງສະຫວັນກໍຍ້ອນພຣະເຈົ້າ ແລະ ການມີຢູ່ຂອງແຜ່ນດິນໂລກເກີດມາຈາກລິດອໍານາດແຫ່ງຊີວິດຂອງພຣະເຈົ້າ. ບໍ່ມີສິ່ງໃດທີ່ມີພະລັງທີ່ສາມາດຢູ່ເໜືອອໍານາດການປົກຄອງຂອງພຣະເຈົ້າໄດ້ ແລະ ບໍ່ມີສິ່ງໃດທີ່ແຂງແກ່ນສາມາດລອດພົ້ນຈາກຂອບເຂດອໍານາດຂອງພຣະເຈົ້າໄດ້. ດ້ວຍເຫດນີ້ ບໍ່ວ່າພວກເຂົາຈະເປັນໃຜ, ທຸກຄົນຕ້ອງຍອມຢູ່ພາຍໃຕ້ການປົກຄອງຂອງພຣະເຈົ້າ, ທຸກຄົນຕ້ອງດໍາລົງຊີວິດຢູ່ພາຍໃຕ້ຂໍ້ຄໍາສັ່ງ

ຂອງພຣະເຈົ້າ ແລະ ບໍ່ມີໃຜສາມາດຫຼີກໜີໄປຈາກມືຂອງພຣະອົງໄດ້.

ບາງເທື່ອ ສິ່ງທີ່ເຈົ້າຕ້ອງການໃນປັດຈຸບັນແມ່ນການຮັບຊີວິດ ຫຼື ບາງເທື່ອ ເຈົ້າກໍຕ້ອງການຮັບຄວາມຈິງ. ບໍ່ວ່າຈະເປັນກໍລະນີໃດກໍຕາມ, ເຈົ້າຕ້ອງການຊອກຫາພຣະເຈົ້າ, ຊອກຫາພຣະເຈົ້າທີ່ເຈົ້າສາມາດເພິ່ງພາໄດ້ ແລະ ຜູ້ທີ່ສາມາດມອບຊີວິດຊົ່ວນິດນິລັນໃຫ້ກັບເຈົ້າ. ຖ້າເຈົ້າຕ້ອງການຮັບຊີວິດຊົ່ວນິດນິລັນ, ເຈົ້າຕ້ອງເຂົ້າໃຈບໍ່ເກີດແຫ່ງຊີວິດຊົ່ວນິດນິລັນກ່ອນ ແລະ ຕ້ອງຮູ້ຈັກວ່າ ພຣະເຈົ້າຢູ່ໃສກ່ອນ. ເຮົາໄດ້ເວົ້າແລ້ວວ່າ ມີພຽງພຣະເຈົ້າທີ່ເປັນຊີວິດທີ່ບໍ່ສາມາດປ່ຽນແປງໄດ້ ແລະ ມີພຽງພຣະເຈົ້າທີ່ສາມາດມີຫົນທາງແຫ່ງຊີວິດໄດ້. ເມື່ອພຣະອົງບໍ່ສາມາດປ່ຽນແປງໄດ້, ສະນັ້ນ ພຣະອົງຈຶ່ງເປັນຊີວິດນິດນິລັນ; ຍ້ອນມີພຽງພຣະເຈົ້າທີ່ເປັນຫົນທາງແຫ່ງຊີວິດ, ສະນັ້ນ ພຣະເຈົ້າເອງຄືຫົນທາງແຫ່ງຊີວິດ. ເມື່ອເປັນດັ່ງນັ້ນ, ເຈົ້າຄວນເຂົ້າໃຈກ່ອນວ່າ ພຣະເຈົ້າຢູ່ໃສ ແລະ ຈະຮັບຫົນທາງແຫ່ງຊີວິດຊົ່ວນິດນິລັນນີ້ໄດ້ແນວໃດ. ໃຫ້ພວກເຮົາມາສົນທະນາກ່ຽວກັບບັນຫາສອງຢ່າງນີ້ໂດຍແຍກກັນ.

ຖ້າເຈົ້າຕ້ອງການຮັບຫົນທາງແຫ່ງຊີວິດຊົ່ວນິດນິລັນຢ່າງແທ້ຈິງ ແລະ ຖ້າເຈົ້າກະຕືລືລົ້ນໃນການຊອກຫາມັນ ແລ້ວຈົ່ງຕອບຄຳຖາມນີ້ກ່ອນ: ໃນປັດຈຸບັນນີ້ ພຣະເຈົ້າຢູ່ໃສ? ບາງເທື່ອ ເຈົ້າຈະຕອບວ່າ "ພຣະເຈົ້າອາໄສຢູ່ໃນສະຫວັນ, ແນ່ນອນ ພຣະອົງຈະບໍ່ອາໄສຢູ່ໃນເຮືອນຂອງເຈົ້າ, ແມ່ນບໍ?" ບາງເທື່ອເຈົ້າອາດເວົ້າວ່າ ພຣະເຈົ້າອາໄສຢູ່ທ່າມກາງທຸກສິ່ງຢ່າງແນ່ນອນ. ຫຼືເຈົ້າອາດເວົ້າວ່າ ພຣະເຈົ້າອາໄສຢູ່ໃນຫົວໃຈຂອງແຕ່ລະຄົນ ຫຼື ພຣະເຈົ້າຢູ່ໃນໂລກຝ່າຍວິນຍານ. ເຮົາບໍ່ປະຕິເສດໃນສິ່ງນີ້ເລີຍ ແຕ່ເຮົາຕ້ອງອະທິບາຍບັນຫາໃຫ້ຈະແຈ້ງ. ມັນບໍ່ຖືກທັງໝົດທີ່ຈະເວົ້າວ່າ ພຣະເຈົ້າອາໄສຢູ່ໃນຫົວໃຈຂອງມະນຸດ ແຕ່ມັນກໍບໍ່ຜິດທັງໝົດເຊັ່ນກັນ. ນັ້ນກໍຍ້ອນວ່າ ທ່າມກາງຄົນທີ່ມີຄວາມເຊື່ອໃນພຣະເຈົ້າ ມີຜູ້ຄົນທີ່ມີຄວາມເຊື່ອທີ່ແທ້ຈິງ ແລະ ມີຜູ້ຄົນທີ່ມີຄວາມເຊື່ອຜິດ, ມີຜູ້ຄົນທີ່ພຣະເຈົ້າເຫັນດີ ແລະ ຜູ້ຄົນທີ່ພຣະອົງບໍ່ເຫັນດີ, ມີຜູ້ຄົນທີ່ເຮັດໃຫ້ພຣະອົງພໍໃຈ ແລະ ຜູ້ຄົນທີ່ພຣະອົງກຽດຊັງ ແລະ ມີຜູ້ຄົນທີ່ພຣະອົງຈະເຮັດໃຫ້ສົມບູນ ແລະ ຜູ້ຄົນທີ່ພຣະອົງຈະໂຍນອອກ. ສະນັ້ນ ເຮົາຈຶ່ງເວົ້າວ່າ ພຣະເຈົ້າອາໄສຢູ່ໃນຫົວໃຈຂອງຄົນ ແຕ່ເປັນຄົນຈຳນວນໜ້ອຍ ແລະ ຄົນເຫຼົ່ານີ້ແມ່ນຄົນທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງໂດຍບໍ່ມີຂໍ້ສົງໄສ, ຄົນທີ່ພຣະເຈົ້າເຫັນດີ, ຄົນທີ່ເຮັດໃຫ້ພຣະອົງພໍໃຈ ແລະ ຄົນທີ່ພຣະອົງຈະເຮັດໃຫ້ສົມບູນ. ພວກເຂົາແມ່ນຄົນທີ່ພຣະເຈົ້ານຳພາ. ຍ້ອນວ່າພຣະເຈົ້ານຳພາພວກເຂົາ, ພວກເຂົາຈຶ່ງເປັນຄົນທີ່ໄດ້ຍິນ ແລະ ເຫັນຫົນທາງແຫ່ງຊີວິດຊົ່ວນິດນິລັນຂອງພຣະເຈົ້າ. ຜູ້ຄົນທີ່ມີຄວາມເຊື່ອໃນພຣະເຈົ້າທີ່ຜິດ, ຜູ້ຄົນທີ່ພຣະເຈົ້າບໍ່ເຫັນດີ, ຜູ້ຄົນທີ່ຖືກພຣະເຈົ້າກຽດຊັງ, ຜູ້ຄົນທີ່ຖືກພຣະເຈົ້າໂຍນອອກ, ພວກເຂົາຈະຖືກພຣະເຈົ້າປະຕິເສດ, ຖືກເຮັດໃຫ້ມີຊີວິດຢູ່ໂດຍປາສະຈາກຫົນທາງແຫ່ງຊີວິດ ແລະ ຖືກເຮັດໃຫ້ເປັນຄົນບໍ່ຮູ້ວ່າ ພຣະເຈົ້າຢູ່ໃສ. ໃນທາງກົງກັນຂ້າມ ຜູ້ຄົນທີ່ມີພຣະເຈົ້າອາໄສຢູ່ໃນຫົວໃຈຂອງພວກເຂົາຮູ້ວ່າ ພຣະອົງຢູ່ໃສ. ພວກເຂົາແມ່ນຄົນທີ່ພຣະເຈົ້າປະທານຫົນທາງແຫ່ງຊີວິດຊົ່ວນິດນິລັນໃຫ້ ແລະ ພວກເຂົາເປັນຄົນທີ່ຕິດຕາມພຣະເຈົ້າ. ໃນປັດຈຸບັນນີ້ ເຈົ້າຮູ້ຈັກບໍວ່າ ພຣະເຈົ້າຢູ່ໃສ? ພຣະເຈົ້າທັງຢູ່ໃນຫົວໃຈຂອງມະນຸດ ແລະ ຢູ່ຄຽງຂ້າງມະນຸດ. ພຣະອົງບໍ່ພຽງແຕ່ຢູ່ໃນໂລກຝ່າຍວິນຍານ ແລະ ຢູ່ເໜືອສິ່ງທັງໝົດ ແຕ່ຢູ່ເທິງແຜ່ນດິນໂລກຫຼາຍກວ່າ ເຊິ່ງເປັນບ່ອນທີ່ມະນຸດອາໄສຢູ່.

ດ້ວຍເຫດນັ້ນ ການມາເຖິງຂອງຍຸກສຸດທ້າຍແມ່ນໄດ້ຮັບເອົາບາດກ້າວຂອງພາລະກິດຂອງພຣະເຈົ້າເຂົ້າສູ່ດິນແດນໃໝ່. ພຣະເຈົ້າມີອຳນາດປົກຄອງເໜືອທຸກສິ່ງ ແລະ ພຣະອົງເປັນເສົາຫຼັກຂອງມະນຸດທີ່ຢູ່ໃນຫົວໃຈຂອງເຂົາ ແລະ ຍິ່ງໄປກວ່ານັ້ນ ພຣະອົງມີຊີວິດຢູ່ທ່າມກາງມະນຸດ. ດ້ວຍວິທີນີ້ເທົ່ານັ້ນພຣະອົງຈຶ່ງສາມາດນຳຫົນທາງແຫ່ງຊີວິດມາສູ່ມະນຸດຊາດ ແລະ ນຳມະນຸດເຂົ້າສູ່ຫົນທາງແຫ່ງຊີວິດ. ພຣະອົງໄດ້ລົງມາເທິງແຜ່ນດິນໂລກ ແລະ ອາໄສທ່າມກາງມະນຸດ ເພື່ອມະນຸດຈະໄດ້ຮັບຫົນທາງແຫ່ງຊີວິດ ແລະ ເພື່ອມະນຸດຈະມີຊີວິດຢູ່. ໃນເວລາດຽວກັນ ພຣະເຈົ້າຍັງສັ່ງທຸກສິ່ງໃນທັງໝົດທັງມວນເພື່ອອຳນວຍການຮ່ວມມືກັບການຄຸ້ມຄອງທີ່ພຣະອົງປະຕິບັດທ່າມກາງມະນຸດ. ດ້ວຍເຫດນັ້ນ, ຖ້າເຈົ້າພຽງຮັບຮູ້ທິດສະດີທີ່ວ່າ ພຣະເຈົ້າຢູ່ໃນແຜ່ນດິນສະຫວັນ ແລະ ໃນຫົວໃຈຂອງມະນຸດ ແຕ່ບໍ່ໄດ້ຮັບຮູ້ຄວາມຈິງແຫ່ງການມີຢູ່ຂອງພຣະເຈົ້າທ່າມກາງມະນຸດ ແລ້ວເຈົ້າຈະບໍ່ໄດ້ຮັບຊີວິດຈັກເທື່ອ ແລະຈະບໍ່ໄດ້ຮັບຫົນທາງແຫ່ງຄວາມຈິງຈັກເທື່ອ.

ພຣະເຈົ້າເອງເປັນຊີວິດ ແລະ ເປັນຄວາມຈິງ ແລະ ຊີວິດ ແລະ ຄວາມຈິງຂອງພຣະອົງດຳລົງຢູ່ຮ່ວມກັນ. ຜູ້ຄົນທີ່ບໍ່ສາມາດຮັບຄວາມຈິງໄດ້ຈະບໍ່ສາມາດຮັບຊີວິດໄດ້ຈັກເທື່ອ. ຖ້າປາສະຈາກການນຳ, ການສະໜັບສະໜູນ ແລະ ການສະໜອງຄວາມຈິງ, ເຈົ້າຈະຮັບພຽງຕົວໜັງສື, ທິດສະດີ ແລະ ເໜືອສິ່ງອື່ນໃດກໍຄື ຄວາມຕາຍ. ຊີວິດຂອງພຣະເຈົ້າມີຢູ່ຕະຫຼອດໄປ ແລະ ຄວາມຈິງ ແລະ ຊີວິດຂອງພຣະອົງດຳລົງຢູ່ຮ່ວມກັນ. ຖ້າເຈົ້າບໍ່ສາມາດຄົ້ນພົບບໍ່ເກີດແຫຼ່ງຄວາມຈິງ ແລ້ວເຈົ້າຈະບໍ່ໄດ້ຮັບການບຳລຸງແຫ່ງຊີວິດ; ຖ້າເຈົ້າບໍ່ສາມາດຮັບການສະໜອງຂອງຊີວິດ ແລ້ວເຈົ້າຈະບໍ່ມີຄວາມຈິງຢ່າງແນ່ນອນ ແລະ ນອກຈາກຈິນຕະນາການ ແລະ ແນວຄວາມຄິດແລ້ວ ຮ່າງກາຍທັງໝົດຂອງເຈົ້າຈະບໍ່ມີຫຍັງເລີຍ ນອກຈາກເນື້ອໜັງຂອງເຈົ້າ, ເນື້ອໜັງທີ່ເນົ່າເໝັນຂອງເຈົ້າ. ຈົ່ງຮູ້ວ່າ ຄຳເວົ້າໃນໜັງສືບໍ່ນັບເປັນຊີວິດ, ການບັນທຶກປະຫວັດສາດບໍ່ສາມາດນຳມານະມັດສະການວ່າເປັນຄວາມຈິງ ແລະ ລະບຽບການຈາກອະດີດບໍ່ສາມາດເຮັດໜ້າທີ່ເປັນພຣະທຳທີ່ພຣະເຈົ້າກ່າວໃນປັດຈຸບັນໄດ້. ມີພຽງແຕ່ສິ່ງທີ່ພຣະເຈົ້າໄດ້ສຳແດງໃນເວລາທີ່ພຣະອົງລົງມາເທິງແຜ່ນດິນໂລກ ແລະ ອາໄສທ່າມກາງມະນຸດ ທີ່ເປັນຄວາມຈິງ, ເປັນຊີວິດ, ເປັນຄວາມປະສົງຂອງພຣະເຈົ້າ ແລະ ຫົນທາງແຫ່ງການປະຕິບັດພາລະກິດໃນປັດຈຸບັນຂອງພຣະອົງ. ຖ້າເຈົ້ານຳການບັນທຶກຂອງພຣະທຳທີ່ພຣະເຈົ້າໄດ້ກ່າວໄວ້ໃນຊ່ວງຍຸກອະດີດຈົນຮອດປັດຈຸບັນໄປໃຊ້, ນັ້ນກໍເຮັດໃຫ້ເຈົ້າເປັນນັກບູຮານຄະດີ ແລະ ທາງດຽວທີ່ຈະໃຫ້ອະທິບາຍກ່ຽວກັບເຈົ້າກໍຄື ເຈົ້າບໍ່ແຕກຕ່າງຫຍັງກັບພວກຊ່ຽວຊານກ່ຽວກັບມໍລະດົກທາງປະຫວັດສາດ. ນັ້ນກໍຍ້ອນວ່າ ເຈົ້າເຊື່ອສະເໝີໃນຮ່ອງຮອຍຂອງພາລະກິດທີ່ພຣະເຈົ້າໄດ້ປະຕິບັດໃນອະດີດທີ່ຜ່ານມາ, ພຽງແຕ່ເຊື່ອໃນເງົາຂອງພຣະເຈົ້າທີ່ພຣະອົງໄດ້ປະໄວ້ໃຫ້ກັບຜູ້ຕິດຕາມພຣະອົງ ໃນເວລາທີ່ພຣະອົງໄດ້ປະຕິບັດພາລະກິດທ່າມກາງມະນຸດ. ເຈົ້າບໍ່ເຊື່ອໃນທິດທາງຂອງພາລະກິດຂອງພຣະເຈົ້າໃນປັດຈຸບັນ, ບໍ່ເຊື່ອໃນຮູບລັກສະນະອັນສະຫງ່າລາສີຂອງພຣະເຈົ້າໃນປັດຈຸບັນ ແລະ ບໍ່ເຊື່ອໃນຫົນທາງແຫ່ງຄວາມຈິງທີ່ພຣະເຈົ້າສຳແດງໃນປັດຈຸບັນ. ດ້ວຍເຫດນັ້ນ ເຈົ້າກໍເປັນຄົນທີ່ຝັນກາງເວັນໂດຍບໍ່ສາມາດປະຕິເສດໄດ້ ເຊິ່ງເປັນຄົນທີ່ບໍ່ໄດ້ຢູ່ໃນຄວາມເປັນຈິງເລີຍ. ຖ້າໃນປັດຈຸບັນ ເຈົ້າຍັງຍຶດຕິດກັບຄຳເວົ້າທີ່

ບໍ່ສາມາດນຳຊີວິດມາໃຫ້ກັບມະນຸດໄດ້, ເຈົ້າກໍເປັນທ່ອນໄມ້ຕາຍທີ່ໝົດຫວັງທ່ອນໜຶ່ງ[ກ], ຍ້ອນວ່າເຈົ້າຫົວບູຮານເກີນໄປ, ຫົວແຂງເກີນໄປ, ບໍ່ຍອມຮັບເຫດຜົນຫຍັງເລີຍ!

ພຣະເຈົ້າທີ່ບັງເກີດເປັນມະນຸດຖືກເອີ້ນວ່າ ພຣະຄຣິດ ແລະ ດ້ວຍເຫດນັ້ນ ພຣະຄຣິດທີ່ສາມາດມອບຄວາມຈິງໃຫ້ກັບຜູ້ຄົນຖືກເອີ້ນວ່າ ພຣະເຈົ້າ. ບໍ່ມີຫຍັງທີ່ຫຼາຍເກີນໄປກວ່າສິ່ງນີ້ ຍ້ອນພຣະອົງມີທາດແທ້ຂອງພຣະເຈົ້າ ແລະ ອຸປະນິໄສຂອງພຣະເຈົ້າ, ສະຕິປັນຍາໃນພາລະກິດຂອງພຣະອົງ ເຊິ່ງມະນຸດບໍ່ສາມາດຢັ່ງເຖິງໄດ້. ຜູ້ຄົນທີ່ເອີ້ນຕົນເອງວ່າ ພຣະຄຣິດ ແຕ່ບໍ່ສາມາດປະຕິບັດພາລະກິດຂອງພຣະເຈົ້າໄດ້ ແມ່ນນັກຫຼອກລວງ. ພຣະຄຣິດບໍ່ແມ່ນພຽງແຕ່ເປັນການປາກົດຕົວຂອງພຣະເຈົ້າເທິງແຜ່ນດິນໂລກເທົ່ານັ້ນ ແຕ່ພຣະອົງຍັງເຮັດໜ້າທີ່ເປັນເນື້ອໜັງພິເສດ ໃນຂະນະທີ່ພຣະອົງປະຕິບັດ ແລະເຮັດພາລະກິດຂອງພຣະອົງໃຫ້ສຳເລັດທ່າມກາງມະນຸດ. ເນື້ອໜັງນີ້ບໍ່ແມ່ນສິ່ງທີ່ມະນຸດຄົນໃດສາມາດທົດແທນໄດ້ ແຕ່ແມ່ນເນື້ອໜັງທີ່ສາມາດແບກຫາບພາລະກິດຂອງພຣະເຈົ້າເທິງແຜ່ນດິນໂລກໄດ້ຢ່າງເຕັມທີ່ ແລະ ສຳແດງອຸປະນິໄສຂອງພຣະເຈົ້າ ແລະ ເປັນຕົວແທນຂອງພຣະເຈົ້າໄດ້ຢ່າງຖືກຕ້ອງ ແລະສະໜອງຊີວິດໃຫ້ກັບມະນຸດ. ບໍ່ໄວກໍຊ້າ ຜູ້ທີ່ປອມເປັນພຣະຄຣິດເຫຼົ່ານັ້ນຈະລົ້ມລະລາຍໄປໝົດ, ເຖິງພວກເຂົາຈະອ້າງວ່າເປັນພຣະຄຣິດ ພວກເຂົາກໍບໍ່ມີທາດແທ້ຂອງພຣະຄຣິດເລີຍ. ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ມະນຸດບໍ່ສາມາດອະທິບາຍຄວາມແທ້ຈິງຂອງພຣະຄຣິດໄດ້, ມີແຕ່ພຣະເຈົ້າເອງທີ່ສາມາດຕອບຄຳຖາມ ແລະ ຕັດສິນໃຈໄດ້. ດ້ວຍເຫດນີ້ ຖ້າເຈົ້າຕ້ອງການສະແຫວງຫາຫົນທາງແຫ່ງຊີວິດຢ່າງແທ້ຈິງ, ກ່ອນອື່ນເຈົ້າຕ້ອງຮັບຮູ້ມັນໂດຍການເຂົ້າມາຢູ່ເທິງແຜ່ນດິນໂລກທີ່ພຣະເຈົ້າປະຕິບັດພາລະກິດໃນການປະທານຫົນທາງແຫ່ງຊີວິດໃຫ້ກັບມະນຸດ ແລະ ເຈົ້າຕ້ອງຮັບຮູ້ມັນວ່າ ມັນແມ່ນຍຸກສຸດທ້າຍທີ່ພຣະອົງມາເທິງແຜ່ນດິນໂລກເພື່ອປະທານຫົນທາງແຫ່ງຊີວິດໃຫ້ກັບມະນຸດ. ສິ່ງນີ້ບໍ່ແມ່ນອະດີດ; ມັນກຳລັງເກີດຂຶ້ນໃນປັດຈຸບັນ.

ພຣະຄຣິດແຫ່ງຍຸກສຸດທ້າຍນຳພາຊີວິດ ແລະ ນຳພາຫົນທາງແຫ່ງຄວາມຈິງທີ່ຍືນນານ ແລະ ບໍ່ສິ້ນສຸດ. ຄວາມຈິງນີ້ແມ່ນເສັ້ນທາງທີ່ມະນຸດຈະໄດ້ຮັບຊີວິດ ແລະ ມັນເປັນເສັ້ນທາງດຽວທີ່ມະນຸດຈະຮູ້ຈັກພຣະເຈົ້າ ແລະ ເສັ້ນທາງທີ່ພຣະເຈົ້າເຫັນດີນຳ. ຖ້າເຈົ້າບໍ່ສະແຫວງຫາຫົນທາງແຫ່ງຊີວິດທີ່ພຣະຄຣິດແຫ່ງຍຸກສຸດທ້າຍມອບໃຫ້ ແລ້ວເຈົ້າຈະບໍ່ໄດ້ຮັບການເຫັນດີຂອງພຣະເຢຊູຈັກເທື່ອ ແລະບໍ່ມີຄຸນສົມບັດໃນການເຂົ້າປະຕູຂອງອານາຈັກສະຫວັນຈັກເທື່ອ ຍ້ອນເຈົ້າເປັນທັງຫຸ່ນ ແລະ ນັກໂທດຂອງປະຫວັດສາດ. ຄົນເຫຼົ່ານັ້ນທີ່ຖືກຄວບຄຸມໂດຍຂໍ້ບັງຄັບ, ໂດຍຈົດໝາຍ ແລະ ຖືກປະຫວັດສາດໃສ່ໂສ້ ຈະບໍ່ສາມາດຮັບຊີວິດຈັກເທື່ອ ແລະ ຈະບໍ່ຮັບຫົນທາງແຫ່ງຊີວິດຕະຫຼອດໄປ. ນີ້ກໍຍ້ອນວ່າທຸກສິ່ງທີ່ພວກເຂົາມີແມ່ນນໍ້າສົກກະປົກທີ່ຂັງຢູ່ເປັນເວລາຫຼາຍພັນປີ ແທນທີ່ຈະເປັນນໍ້າແຫ່ງຊີວິດທີ່ຫຼັ່ງໄຫລມາຈາກບັນລັງ. ຄົນເຫຼົ່ານັ້ນທີ່ບໍ່ໄດ້ຮັບນໍ້າແຫ່ງຊີວິດຈະຍັງຄົງເປັນສາກສົບຕະຫຼອດໄປ, ເປັນຂອງຫຼິ້ນໃຫ້ກັບຊາຕານ ແລະ ເປັນບຸດຊາຍແຫ່ງນະຮົກ. ແລ້ວ ພວກເຂົາຈະສາມາດເຫັນພຣະເຈົ້າ

ກ ທ່ອນໄມ້ຕາຍ: ສຳນວນພາສາຈີນທີ່ໝາຍເຖິງ "ເກີນຄວາມຊ່ວຍເຫຼືອ".

ໄດ້ແນວໃດ? ຖ້າເຈົ້າພຽງແຕ່ພະຍາຍາມຍຶດຕິດກັບອະດີດ, ພຽງແຕ່ຮັກສາສິ່ງຕ່າງໆຄ້າຍຄືກັບວ່າພວກມັນຍັງບໍ່ເໜັງຕີງເລີຍ ແລະ ບໍ່ພະຍາຍາມປ່ຽນແປງສະຖານະພາບໃນປັດຈຸບັນ ແລະ ປະຖິ້ມປະຫວັດສາດ, ແລ້ວເຈົ້າຈະບໍ່ຕໍ່ຕ້ານພຣະເຈົ້າຢູ່ຕະຫຼອດເວລາບໍ? ຂັ້ນຕອນໃນພາລະກິດຂອງພຣະເຈົ້າກວ້າງໃຫຍ່ ແລະ ຍິ່ງໃຫຍ່ ຄືກັບຄື້ນທະເລທີ່ຍິ່ງຂຶ້ນ ແລະ ສຽງຟ້າຮ້ອງທີ່ດັງສະນັ້ນ, ແຕ່ເຈົ້ານັ່ງ ແລະ ລໍຖ້າຄວາມພິນາດໂດຍບໍ່ດີ້ນຮົນ, ຍຶດໝັ້ນໃນຄວາມໂງ່ຂອງເຈົ້າ ແລະ ບໍ່ເຮັດຫຍັງເລີຍ. ດ້ວຍວິທີນີ້ເຈົ້າຈະສາມາດຖືກພິຈາລະນາໃຫ້ເປັນຄົນທີ່ຕິດຕາມບາດຍ່າງຂອງພຣະເມສານ້ອຍໄດ້ແນວໃດ? ເຈົ້າຈະສາມາດພິສູດຄວາມຖືກຕ້ອງຂອງພຣະເຈົ້າທີ່ເຈົ້າຍຶດໝັ້ນວ່າເປັນພຣະເຈົ້າທີ່ໃໝ່ຢູ່ສະເໝີ ແລະ ບໍ່ເກົ່າເລີຍໄດ້ແນວໃດ? ພຣະທຳຂອງໜັງສືຫົວສີເຫຼືອງຂອງເຈົ້າຈະນຳພາເຈົ້າເຂົ້າສູ່ຍຸກໃໝ່ໄດ້ແນວໃດ? ພຣະທຳເຫຼົ່ານັ້ນຈະນຳພາເຈົ້າໃຫ້ສະແຫວງຫາຂັ້ນຕອນໃນພາລະກິດຂອງພຣະເຈົ້າໄດ້ແນວໃດ? ພຣະທຳນັ້ນຈະນຳເຈົ້າຂຶ້ນສູ່ແຜ່ນດິນສະຫວັນໄດ້ແນວໃດ? ສິ່ງທີ່ເຈົ້າມີຢູ່ໃນມືຂອງເຈົ້າແມ່ນຕົວໜັງສືທີ່ສາມາດສະໜອງພຽງແຕ່ເຄື່ອງປອບໃຈຊົ່ວຄາວ, ບໍ່ແມ່ນຄວາມຈິງທີ່ສາມາດໃຫ້ຊີວິດໄດ້. ຂໍ້ພຣະທຳທີ່ເຈົ້າອ່ານສາມາດພຽງແຕ່ໃຫ້ເຈົ້າເພີ່ມພູນລີ້ນຂອງເຈົ້າ ແລະ ບໍ່ແມ່ນພຣະທຳແຫ່ງປັດສະຍາທີ່ສາມາດຊ່ວຍໃຫ້ເຈົ້າຮູ້ຈັກຊີວິດຂອງມະນຸດ, ຢ່າວ່າແຕ່ຫົນທາງທີ່ສາມາດນຳພາເຈົ້າໄປສູ່ຄວາມສົມບູນເລີຍ. ຄວາມບໍ່ກົງກັນນີ້ບໍ່ໄດ້ເຮັດໃຫ້ເຈົ້າໄຕ່ຕອງແດ່ບໍ? ມັນບໍ່ໄດ້ເຮັດໃຫ້ເຈົ້າຮູ້ຈັກເຖິງສິ່ງລຶກລັບທີ່ຢູ່ພາຍໃນບໍ? ເຈົ້າສາມາດນຳພາຕົນເອງໄປສະຫວັນເພື່ອພົບກັບພຣະເຈົ້າດ້ວຍຕົນເອງບໍ? ຖ້າປາສະຈາກການມາຂອງພຣະເຈົ້າ, ເຈົ້າຈະສາມາດນຳຕົວເອງເຂົ້າສູ່ສະຫວັນເພື່ອມີຄວາມສຸກແບບຄອບຄົວດຽວກັນກັບພຣະເຈົ້າບໍ? ໃນຕອນນີ້ ເຈົ້າຍັງກຳລັງຝັນຢູ່ບໍ? ດ້ວຍເຫດນັ້ນ ເຮົາຂໍແນະນຳໃຫ້ເຈົ້າຢຸດຝັນ ແລະ ເບິ່ງວ່າ ແມ່ນໃຜທີ່ກຳລັງປະຕິບັດພາລະກິດໃນຕອນນີ້, ເບິ່ງວ່າໃຜທີ່ກຳລັງປະຕິບັດພາລະກິດໃນການຊ່ວຍມະນຸດໃນຍຸກສຸດທ້າຍ. ຖ້າເຈົ້າບໍ່ຢຸດ, ເຈົ້າຈະບໍ່ໄດ້ຮັບຄວາມຈິງຈັກເທື່ອ ແລະ ຈະບໍ່ໄດ້ຮັບຊີວິດອີກຕໍ່ໄປ.

ຜູ້ຄົນທີ່ຕ້ອງການໄດ້ຮັບຊີວິດໂດຍບໍ່ເພິ່ງພາຄວາມຈິງທີ່ພຣະຄຣິດກ່າວໄວ້ ແມ່ນຄົນທີ່ເປັນຕາຫົວຂວັນທີ່ສຸດໃນແຜ່ນດິນໂລກ ແລະ ຄົນທີ່ບໍ່ຍອມຮັບຫົນທາງແຫ່ງຊີວິດທີ່ພຣະຄຣິດນຳມາໃຫ້ແມ່ນຄົນທີ່ຫຼົງໃນຄວາມເພີ້ຝັນ. ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ຄົນທີ່ບໍ່ຍອມຮັບພຣະຄຣິດໃນຍຸກສຸດທ້າຍຈະຖືກພຣະເຈົ້າກຽດຊັງຕະຫຼອດໄປ. ພຣະຄຣິດເປັນປະຕູໃຫ້ມະນຸດເຂົ້າສູ່ອານາຈັກໃນຍຸກສຸດທ້າຍ ແລະ ບໍ່ມີໃຜທີ່ສາມາດອ້ອມຜ່ານພຣະອົງໄປໄດ້. ບໍ່ມີໃຜທີ່ສາມາດຖືກພຣະເຈົ້າເຮັດໃຫ້ສົມບູນ ນອກຈາກຜ່ານທາງພຣະຄຣິດ. ເຈົ້າເຊື່ອໃນພຣະເຈົ້າ ແລະ ດ້ວຍເຫດນີ້ ເຈົ້າຕ້ອງຍອມຮັບພຣະທຳຂອງພຣະອົງ ແລະ ເຊື່ອຟັງຫົນທາງຂອງພຣະອົງ. ເຈົ້າບໍ່ສາມາດຄິດເຖິງພຽງແຕ່ການຮັບພອນໃນຂະນະທີ່ບໍ່ສາມາດຮັບຄວາມຈິງ ແລະ ບໍ່ສາມາດຍອມຮັບການສະໜອງຊີວິດ. ພຣະຄຣິດມາໃນຊ່ວງຍຸກສຸດທ້າຍ ເພື່ອວ່າທຸກຄົນທີ່ເຊື່ອໃນພຣະອົງຢ່າງແທ້ຈິງຈະໄດ້ຮັບການສະໜອງຊີວິດ. ພາລະກິດຂອງພຣະອົງແມ່ນເພື່ອພົນປະໂຫຍດຂອງການສິ້ນສຸດຍຸກເກົ່າ ແລະ ເລີ່ມຕົ້ນຍຸກໃໝ່ ແລະ ພາລະກິດຂອງພຣະອົງເປັນເສັ້ນທາງທີ່ທຸກຄົນຕ້ອງໄດ້ຮັບເອົາເພື່ອເຂົ້າສູ່ຍຸກໃໝ່. ຖ້າເຈົ້າບໍ່ສາມາດຮັບຮູ້ພຣະອົງ

ແລະ ກົງກັນຂ້າມ ເຈົ້າກ່າວໂທດ, ກ່າວໝິ່ນປະໝາດ ຫຼື ເຖິງກັບຂົ່ມເຫັງພຣະອົງ, ເຈົ້າກໍຈະຖືກເຜົາໄໝ້ຕະຫຼອດໄປຊົ່ວນິດນິລັນ ແລະ ຈະບໍ່ໄດ້ເຂົ້າອານາຈັກຂອງພຣະເຈົ້າຈັກເທື່ອ. ຍ້ອນພຣະຄຣິດອົງນີ້ເອງເປັນການສະແດງຂອງພຣະວິນຍານບໍລິສຸດ, ການສະແດງຂອງພຣະເຈົ້າ, ຂອງຜູ້ທີ່ພຣະເຈົ້າໄວ້ໃຈໃຫ້ປະຕິບັດພາລະກິດຂອງພຣະອົງເທິງແຜ່ນດິນໂລກ ແລະ ດ້ວຍເຫດນັ້ນ ເຮົາຈຶ່ງເວົ້າວ່າ ຖ້າເຈົ້າບໍ່ສາມາດຍອມຮັບທຸກສິ່ງທີ່ພຣະຄຣິດແຫ່ງຍຸກສຸດທ້າຍໄດ້ກະທຳ, ເຈົ້າກໍກ່າວໝິ່ນປະໝາດພຣະວິນຍານບໍລິສຸດ. ຜົນກຳທີ່ຄົນເຫຼົ່ານັ້ນທີ່ກ່າວໝິ່ນປະໝາດພຣະວິນຍານບໍລິສຸດຈະໄດ້ຮັບແມ່ນເຮັດໃຫ້ທຸກຄົນເຫັນໄດ້ຊັດເຈນໂດຍຕົວມັນເອງຢູ່ແລ້ວ. ພ້ອມນີ້ ເຮົາຂໍບອກເຈົ້າວ່າ ຖ້າເຈົ້າຕໍ່ຕ້ານພຣະຄຣິດແຫ່ງຍຸກສຸດທ້າຍ, ຖ້າເຈົ້າປະຕິເສດພຣະຄຣິດແຫ່ງຍຸກສຸດທ້າຍ, ຈະບໍ່ມີໃຜທີ່ສາມາດແບກຮັບຜົນຕາມມາແທນເຈົ້າໄດ້. ຍິ່ງໄປກວ່ານັ້ນ, ນັບຕັ້ງແຕ່ມື້ນີ້ເປັນຕົ້ນໄປ ເຈົ້າຈະບໍ່ມີໂອກາດໃນການໄດ້ຮັບຄວາມເຫັນໃຈຂອງພຣະເຈົ້າອີກແລ້ວ; ເຖິງແມ່ນວ່າເຈົ້າຈະພະຍາຍາມໄຖ່ຕົນເອງ, ເຈົ້າກໍຈະບໍ່ໄດ້ເຫັນໃບໜ້າຂອງພຣະເຈົ້າອີກຕໍ່ໄປ. ຍ້ອນສິ່ງທີ່ເຈົ້າຕໍ່ຕ້ານບໍ່ແມ່ນມະນຸດ, ສິ່ງທີ່ເຈົ້າປະຕິເສດບໍ່ແມ່ນສິ່ງມີຊີວິດທີ່ອ່ອນແອ ແຕ່ເປັນພຣະຄຣິດ. ເຈົ້າຮູ້ບໍວ່າຜົນຕາມມາຈະແມ່ນຫຍັງ? ເຈົ້າຈະບໍ່ໄດ້ເຮັດຄວາມຜິດພາດນ້ອຍໆ ແຕ່ເປັນການກະທຳຄວາມຜິດທາງອາຍາທີ່ຊົ່ວຮ້າຍຫຼາຍ. ດ້ວຍເຫດນີ້ ເຮົາຈຶ່ງຂໍແນະນຳໃຫ້ທຸກຄົນຍິ່ງແຂ້ວຂອງເຈົ້າຕໍ່ໜ້າຄວາມຈິງ ຫຼື ວິຈານຢ່າງບໍ່ລະມັດລະວັງ ຍ້ອນມີພຽງແຕ່ຄວາມຈິງເທົ່ານັ້ນທີ່ສາມາດນຳຊີວິດມາໃຫ້ເຈົ້າໄດ້ ແລະ ບໍ່ມີຫຍັງ ນອກຈາກຄວາມຈິງທີ່ສາມາດເຮັດໃຫ້ເຈົ້າເກີດໃໝ່ ແລະ ເຫັນໃບໜ້າຂອງພຣະເຈົ້າໄດ້.

# ກະກຽມຄວາມດີໃຫ້ພຽງພໍ
# ສຳລັບຈຸດໝາຍປາຍທາງຂອງເຈົ້າ

ເຮົາໄດ້ເຮັດພາລະກິດຫຼາຍຢ່າງທ່າມກາງພວກເຈົ້າ ແລະ ແນ່ນອນວ່າ ເຮົາໄດ້ກ່າວຖ້ອຍຄຳຈຳນວນໜຶ່ງເຊັ່ນກັນ. ແຕ່ເຮົາກໍ່ສາມາດຫ້າມບໍ່ໃຫ້ຮູ້ສຶກວ່າ ພຣະທຳຂອງເຮົາ ແລະ ພາລະກິດຂອງເຮົາຍັງບໍ່ທັນບັນລຸຕາມຈຸດປະສົງໃນພາລະກິດຂອງເຮົາໃນຍຸກສຸດທ້າຍຢ່າງສົມບູນ. ເນື່ອງຈາກວ່າໃນຍຸກສຸດທ້າຍນີ້ ພາລະກິດຂອງເຮົາບໍ່ແມ່ນເພື່ອເຫັນແກ່ຜູ້ໃດຜູ້ໜຶ່ງ ຫຼື ຜູ້ຄົນໃດໜຶ່ງ ແຕ່ແມ່ນເພື່ອສະແດງອຸປະນິໄສໂດຍທຳມະຊາດຂອງເຮົາ. ເຖິງຢ່າງໃດກໍຕາມ, ຍ້ອນຫຼາຍສາເຫດ ບາງເທື່ອກໍ່ອາດເປັນຍ້ອນບໍ່ມີເວລາ ຫຼື ຫຍຸ້ງຢູ່ກັບວຽກ, ຜູ້ຄົນຈຶ່ງບໍ່ໄດ້ຮັບຄວາມຮູ້ໃດໆກ່ຽວກັບເຮົາຈາກອຸປະນິໄສຂອງເຮົາເລີຍ. ເພາະສະນັ້ນ ເຮົາຈຶ່ງກ້າວເຂົ້າສູ່ແຜນການໃໝ່ຂອງເຮົາ, ພາລະກິດຂັ້ນສຸດທ້າຍຂອງເຮົາ ແລະເປີດໜ້າໃໝ່ໃນພາລະກິດຂອງເຮົາ ເພື່ອໃຫ້ທຸກຄົນທີ່ເຫັນເຮົາຈະທຸບຕີເອິກຂອງພວກເຂົາ ແລະຮ້ອງໄຫ້ຄໍ່າຄວນຢູ່ບໍ່ເຊົາຍ້ອນການມີຢູ່ຂອງເຮົາ. ນີ້ກໍຍ້ອນວ່າ ເຮົາຈະນຳຈຸດຈົບຂອງມະນຸດມາສູ່ໂລກ ແລະ ນັບຈາກຈຸດນີ້ເປັນຕົ້ນໄປ ເຮົາຈະເປີດເຜີຍອຸປະນິໄສທັງໝົດຂອງເຮົາຕໍ່ໜ້າມະນຸດຊາດ ເພື່ອໃຫ້ທຸກຄົນທີ່ຮູ້ຈັກເຮົາ ແລະ ທຸກຄົນທີ່ບໍ່ຮູ້ຈັກເຮົາໄດ້ເຫັນເຕັມຕາ ແລະ ຮູ້ວ່າເຮົາໄດ້ມາເຖິງໂລກມະນຸດແທ້ໆ, ໄດ້ມາຍັງແຜ່ນດິນໂລກບ່ອນທີ່ທຸກສິ່ງຢ່າງແຜ່ຂະຫຍາຍ. ນີ້ແມ່ນແຜນການຂອງເຮົາ ແລະ "ການສາລະພາບ" ດຽວຂອງເຮົາຕັ້ງແຕ່ທີ່ເຮົາໄດ້ສ້າງມະນຸດຊາດ. ຂໍໃຫ້ພວກເຈົ້າຈະເອົາໃຈໃສ່ເຝົ້າຕິດຕາມທຸກການເຄື່ອນໄຫວຂອງເຮົາຢ່າງຕັ້ງໃຈ, ເພາະໄມ້ຄ້ອນຂອງເຮົາຍັບເຂົ້າໃກ້ມະນຸດຊາດ, ເຂົ້າໃກ້ບັນດາຜູ້ທີ່ຕໍ່ຕ້ານເຮົາ.

ເຮົາລິເລີ່ມພາລະກິດທີ່ເຮົາຕ້ອງປະຕິບັດຮ່ວມກັບສະຫວັນ. ແລ້ວເຮົາຍ່າງໄປມາທ່າມກາງກະແສຂອງຜູ້ຄົນ ແລະ ຍັບໄປມາລະຫວ່າງສະຫວັນ ແລະ ແຜ່ນດິນໂລກ ໂດຍບໍ່ມີຜູ້ໃດສັງເກດເຫັນການເຄື່ອນໄຫວຂອງເຮົາ ຫຼື ສັງເກດເຫັນພຣະທຳຂອງເຮົາ. ສະນັ້ນ, ແຜນການຂອງເຮົາຈຶ່ງສືບຕໍ່ມີຄວາມຄືບໜ້າຢ່າງລ່ຽນໄຫຼ. ມັນເປັນຍ້ອນວ່າຄວາມຮູ້ສຶກທັງໝົດຂອງພວກເຈົ້າມຶນຊາ ພວກເຈົ້າຈຶ່ງບໍ່ຮູ້ຂັ້ນຕອນພາລະກິດຂອງເຮົາ. ແຕ່ຈະມີມື້ໜຶ່ງທີ່ພວກເຈົ້າຈະຮັບຮູ້ເຈດຕະນາຂອງເຮົາ. ໃນປັດຈຸບັນ, ເຮົາດຳລົງຊີວິດຢູ່ນຳພວກເຈົ້າ ແລະ ທົນທຸກຮ່ວມກັບພວກເຈົ້າ ແລະ ເຮົາໄດ້ເລີ່ມເຂົ້າໃຈທ່າທີ່ໆມະນຸດຊາດມີຕໍ່ເຮົາມາດົນນານແລ້ວ. ເຮົາບໍ່ຕ້ອງການເວົ້າເພີ່ມເຕີມ ແລ້ວແຮງໄກທີ່ເຮົາຈະຕ້ອງການນຳເອົາຄວາມອັບອາຍມາສູ່ພວກເຈົ້າໂດຍຍົກຕົວຢ່າງເພີ່ມເຕີມກ່ຽວກັບຫົວຂໍ້ທີ່ເຈັບປວດນີ້ຂຶ້ນມາເວົ້າ. ເຮົາຫວັງພຽງແຕ່ໃຫ້ພວກເຈົ້າຈື່ທຸກສິ່ງທີ່ພວກເຈົ້າໄດ້ກະທຳໄວ້ໃນໃຈຂອງພວກເຈົ້າ ເພື່ອພວກເຮົາຈະໄດ້ຈົດຈຳເລື່ອງລາວຂອງພວກເຮົາໃນວັນທີ່ພວກເຮົາພົບກັນອີກຄັ້ງ. ເຮົາບໍ່ຢາກກ່າວຫາຜູ້ໃດໃນພວກເຈົ້າຢ່າງຜິດໆ ເພາະວ່າເຮົາປະຕິບັດຢ່າງທ່ຽງທຳ, ຍຸຕິທຳ ແລະ ມີສັກສີ. ແນ່ນອນ ເຮົາຍັງຫວັງວ່າພວກເຈົ້າຈະສາມາດຊື່ສັດ ແລະ ບໍ່ເຮັດສິ່ງໃດທີ່ຂັດຕໍ່ສະຫວັນ ແລະ ແຜ່ນດິນໂລກ ຫຼື ສຳນຶກຂອງເຈົ້າເອງ. ນີ້ເປັນສິ່ງດຽວທີ່ເຮົາຂໍຈາກພວກເຈົ້າ. ຫຼາຍຄົນຮູ້ສຶກກະວົນກະວາຍ ແລະ ບໍ່ສະບາຍ

ຍ້ອນພວກເຂົາໄດ້ກະທຳຄວາມຜິດອັນຊົ່ວຊ້າ ແລະ ຫຼາຍຄົນຮູ້ສຶກອັບອາຍກັບຕົວເອງ ເພາະວ່າພວກເຂົາບໍ່ເຄີຍເຮັດຄວາມດີເລີຍແມ່ນແຕ່ຢ່າງດຽວ. ແຕ່ນອກຈາກຈະບໍ່ຮູ້ສຶກອັບອາຍຍ້ອນຄວາມຜິດບາບຂອງພວກເຂົາແລ້ວ, ຍັງມີຫຼາຍຄົນທີ່ແຮງຊົ່ວລົງອີກ, ພາກັນຖອດໜ້າກາກທີ່ປົກປິດພາບລັກທີ່ໜ້າລັງກຽດຂອງພວກເຂົາ ເຊິ່ງຍັງບໍ່ທັນຖືກເປີດເຜີຍຢ່າງສົມບູນ ເພື່ອທົດສອບອຸປະນິໄສຂອງເຮົາ. ເຮົາບໍ່ສົນໃຈ ຫຼື ເອົາໃຈໃສ່ຕໍ່ການກະທຳຂອງຄົນໃດໜຶ່ງ. ກົງກັນຂ້າມ, ເຮົາເຮັດພາລະກິດທີ່ເຮົາຄວນເຮັດບໍ່ວ່າຈະເປັນການເກັບກຳຂໍ້ມູນ ຫຼື ການທ່ອງທ່ຽວໄປມາເທິງແຜ່ນດິນໂລກ ຫຼື ເຮັດສິ່ງໃດໜຶ່ງພາຍໃນຄວາມສົນໃຈຂອງເຮົາ. ໃນເວລາທີ່ສຳຄັນ, ເຮົາຈະສືບຕໍ່ກັບພາລະກິດຂອງເຮົາທ່າມກາງມະນຸດດັ່ງທີ່ໄດ້ວາງແຜນໄວ້ແຕ່ຕົ້ນ ເຊິ່ງຈະບໍ່ໄວ ຫຼື ບໍ່ຊ້າແມ່ນແຕ່ວິນາທີດຽວ ແລະ ຈະກະທຳຢ່າງງ່າຍດາຍ ແລະວ່ອງໄວ. ເຖິງຢ່າງໃດກໍຕາມ, ໃນທຸກຂັ້ນຕອນຂອງພາລະກິດຂອງເຮົາ, ບາງຄົນຈະຖືກຄັດອອກເພາະວ່າເຮົາລັງກຽດລັກສະນະການປະຈົບປະແຈງຂອງພວກເຂົາ ແລະ ຄວາມເຊື່ອຟັງອັນຈອມປອມຂອງພວກເຂົາ. ບັນດາຜູ້ທີ່ໜ້າລັງກຽດສຳລັບເຮົາຈະຖືກປະຖິ້ມຢ່າງແນ່ນອນ ບໍ່ວ່າຈະໂດຍເຈດຕະນາ ຫຼື ບໍ່ເຈດຕະນາກໍຕາມ. ສະຫຼຸບຫຍໍ້ໆກໍຄື ເຮົາຈະເຮັດໃຫ້ທຸກຄົນທີ່ເຮົາລັງກຽດຢູ່ຫ່າງຈາກເຮົາ. ແນ່ນອນວ່າ ເຮົາຈະບໍ່ປ່ອຍຄົນບາບທີ່ຢູ່ໃນເຮືອນຂອງເຮົາ. ຍ້ອນມື້ລົງໂທດມະນຸດຍັບໃກ້ເຂົ້າມາແລ້ວ, ເຮົາຈຶ່ງບໍ່ຮີບຮ້ອນທີ່ຈະຂັບໄລ່ບັນດາວິນຍານທີ່ໜ້າລັງກຽດອອກໄປຈາກເຮືອນຂອງເຮົາ ເພາະວ່າເຮົາມີແຜນການຂອງເຮົາຕ່າງຫາກ.

ຕອນນີ້ເປັນເວລາທີ່ເຮົາຈະກຳນົດຈຸດຈົບຂອງມະນຸດແຕ່ລະຄົນ, ບໍ່ແມ່ນຂັ້ນຕອນທີ່ເຮົາເລີ່ມປັ້ນມະນຸດ. ເຮົາບັນທຶກທຸກຖ້ອຍຄຳ ແລະ ການກະທຳຂອງແຕ່ລະຄົນ, ເສັ້ນທາງທີ່ພວກເຂົາຕິດຕາມເຮົາ, ຄຸນລັກສະນະໂດຍທຳມະຊາດຂອງພວກເຂົາ ແລະ ວິທີທີ່ພວກເຂົາປະພຶດຕົນໃນທີ່ສຸດໄວ້ໃນປຶ້ມບັນທຶກຂອງເຮົາ. ດ້ວຍວິທີນີ້, ບໍ່ວ່າພວກເຂົາຈະເປັນຄົນແບບໃດກໍຕາມ, ຈະບໍ່ມີຜູ້ໃດລອດພົ້ນຈາກມືຂອງເຮົາໄດ້ ແລະ ທຸກຄົນຈະຢູ່ກັບກຸ່ມຂອງພວກເຂົາເອງທີ່ເຮົາກຳນົດໄວ້. ເຮົາຕັດສິນຈຸດໝາຍປາຍທາງຂອງແຕ່ລະຄົນໂດຍບໍ່ໄດ້ອີງຕາມອາຍຸ, ຄວາມອາວຸໂສ, ຈຳນວນການທົນທຸກ ແລະ ໜ້ອຍທີ່ສຸດແມ່ນລະດັບທີ່ພວກເຂົາຮຽກຮ້ອງຄວາມໜ້າສົງສານ ແຕ່ຕັດສິນຕາມວ່າພວກເຂົາມີຄວາມຈິງ ຫຼື ບໍ່. ບໍ່ມີທາງເລືອກອື່ນ ນອກຈາກທາງເລືອກນີ້ທາງດຽວ. ພວກເຈົ້າຕ້ອງຮູ້ວ່າ ທຸກຄົນທີ່ບໍ່ປະຕິບັດຕາມຄວາມປະສົງຂອງພຣະເຈົ້າຍັງຈະຖືກລົງໂທດ. ນີ້ເປັນຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້. ເພາະສະນັ້ນ, ທຸກຄົນທີ່ຖືກລົງໂທດກໍຈະຖືກລົງໂທດຕາມຄວາມຊອບທຳຂອງພຣະເຈົ້າ ແລະ ເປັນຜົນກຳຈາກການກະທຳທີ່ຊົ່ວຮ້າຍຫຼາຍຄັ້ງຂອງພວກເຂົາ. ເຮົາບໍ່ໄດ້ປ່ຽນແປງແຜນການຂອງເຮົາຈັກໜ້ອຍນັບຕັ້ງແຕ່ເລີ່ມຕົ້ນມາ. ແຕ່ສຳລັບມະນຸດແລ້ວ, ມັນເປັນພຽງແຕ່ເບິ່ງຄືວ່າຈຳນວນຜູ້ທີ່ເຮົາຊີ້ນຳດ້ວຍພຣະທຳຂອງເຮົາພ້ອມທັງຜູ້ທີ່ເຮົາຮອງຮັບຢ່າງແທ້ຈິງແມ່ນຫຼຸດໜ້ອຍຖອຍລົງ. ເຖິງຢ່າງໃດກໍຕາມ, ເຮົາຢືນຢັນວ່າແຜນການຂອງເຮົາບໍ່ເຄີຍປ່ຽນ; ກົງກັນຂ້າມ, ມັນແມ່ນຄວາມເຊື່ອ ແລະ ຄວາມຮັກຂອງມະນຸດນັ້ນທີ່ປ່ຽນແປງຢູ່ຕະຫຼອດເວລາ, ຫຼຸດໜ້ອຍລົງ, ເຖິງຂັ້ນກັບວ່າແຕ່ລະຄົນປ່ຽນຈາກປະຈົບປະແຈງເຮົາເປັນເຮັດເຢັນຊາໃສ່ເຮົາ ແລະ ເຖິງກັບຂັບໄລ່ເຮົາອອກ. ທ່າທີຂອງເຮົາຕໍ່ພວກເຈົ້າຈະບໍ່

ຮ້ອນບໍ່ເຢັນຈົນເຮົາຮູ້ສຶກລັງກຽດ ແລະ ກຽດຊັງ ແລະ ໃນທີ່ສຸດກໍຕັດສິນດ້ວຍການລົງໂທດ. ເຖິງຢ່າງໃດກໍຕາມ, ໃນມື້ທີ່ພວກເຈົ້າຖືກພິພາກສາ, ເຮົາຍັງຈະເຫັນພວກເຈົ້າ ແຕ່ພວກເຈົ້າຈະບໍ່ສາມາດເຫັນເຮົາອີກຕໍ່ໄປ. ໃນເມື່ອຊີວິດຂອງພວກເຈົ້າເປັນຕາໜ້າເບື່ອໜ່າຍ ແລະ ມືວໝອງຕໍ່ເຮົາແລ້ວ, ແນ່ນອນວ່າເຮົາໄດ້ເລືອກສະພາບແວດລ້ອມທີ່ແຕກຕ່າງເພື່ອທີ່ຈະອາໄສຢູ່ ເພື່ອຫຼີບຫຼີກຄວາມເຈັບປວດຈາກຄຳເວົ້າອັນຊົ່ວຮ້າຍຂອງພວກເຈົ້າ ແລະ ຫຼີບຫຼີກພຶດຕິກຳທີ່ຊົ່ວຊ້າເກີນຮັບໄດ້ຂອງພວກເຈົ້າ ເພື່ອພວກເຈົ້າຈະບໍ່ໄດ້ຫຼອກລວງເຮົາອີກຕໍ່ໄປ ຫຼື ປະຕິບັດຕໍ່ເຮົາແບບພໍເປັນພິທີ. ກ່ອນເຮົາຈະຈາກພວກເຈົ້າໄປ, ເຮົາຍັງຕ້ອງຂໍໃຫ້ພວກເຈົ້າຫຼີກເວັ້ນຈາກການກະທຳທີ່ບໍ່ສອດຄ່ອງກັບຄວາມຈິງ. ກົງກັນຂ້າມ, ພວກເຈົ້າຄວນເຮັດແຕ່ສິ່ງທີ່ຖືກໃຈທຸກຄົນ, ສິ່ງທີ່ເປັນປະໂຫຍດຕໍ່ທຸກຄົນ ແລະ ສິ່ງທີ່ເປັນປະໂຫຍດຕໍ່ຈຸດໝາຍປາຍທາງຂອງພວກເຈົ້າເອງ, ຖ້າບໍ່ດັ່ງນັ້ນ ຜູ້ທີ່ທົນທຸກໃນທ່າມກາງໄພພິບັດກໍ່ຈະບໍ່ແມ່ນຜູ້ໃດນອກຈາກໂຕເຈົ້າເອງ.

ຄວາມເມດຕາຂອງເຮົາແມ່ນສະແດງຕໍ່ບັນດາຜູ້ທີ່ຮັກເຮົາ ແລະ ຜູ້ທີ່ປະຕິເສດຕົວເອງ. ການລົງໂທດແມ່ນມາຫາຄົນຊົ່ວໃນຂະນະທີ່ເປັນຫຼັກຖານເຖິງອຸປະນິໄສທີ່ຊອບທຳຂອງເຮົາ ແລະ ຍິ່ງໄປກວ່ານັ້ນ ແມ່ນຍັງເປັນພະຍານເຖິງໂກດຮ້າຍຂອງເຮົາ. ເມື່ອໄພພິບັດມາເຖິງ, ທຸກຄົນທີ່ຕໍ່ຕ້ານເຮົາຈະຮ້ອງໄຫ້ໃນຂະນະທີ່ພວກເຂົາຕົກເປັນຜູ້ເຄາະຮ້າຍຈາກຄວາມອຶດຫິວ ແລະ ໂລກລະບາດ. ບັນດາຜູ້ທີ່ເຮັດຊົ່ວທຸກຮູບແບບ ແຕ່ໄດ້ຕິດຕາມເຮົາເປັນເວລາຫຼາຍປີ ຈະບໍ່ໜີພົ້ນຈາກຊົດໃຊ້ສຳລັບຄວາມຜິດບາບຂອງພວກເຂົາ; ພວກເຂົາກໍຍັງຈະຕົກສູ່ໄພພິບັດເຊັ່ນກັນ ເຊິ່ງບໍ່ຄ່ອຍປາກົດໃຫ້ເຫັນໃນຫຼາຍລ້ານປີທີ່ຜ່ານມາ ແລະ ພວກເຂົາກໍຈະໃຊ້ຊີວິດໃນສະພາວະທີ່ຕື່ນຕົກໃຈ ແລະ ຢ້ານກົວ. ແລ້ວຜູ້ຕິດຕາມຂອງເຮົາທີ່ສະແດງຄວາມຈົງຮັກພັກດີຕໍ່ເຮົາກໍ່ຈະປິຕິຍິນດີ ແລະ ສັນລະເສີນຄວາມຍິ່ງໃຫຍ່ຂອງເຮົາ. ພວກເຂົາຈະປະສົບກັບຄວາມເພິ່ງພໍໃຈເໜືອທີ່ຈະພັນລະນາ ແລະ ດຳລົງຊີວິດທ່າມກາງຄວາມສຸກໃນແບບທີ່ເຮົາບໍ່ເຄີຍປະທານໃຫ້ມະນຸດມາກ່ອນ. ຍ້ອນວ່າເຮົາຮັກການກະທຳດີຂອງມະນຸດ ແລະ ກຽດຊັງການກະທຳທີ່ຊົ່ວຊ້າຂອງພວກເຂົາ. ນັບຕັ້ງແຕ່ເຮົາເລີ່ມຕົ້ນນຳພາມະນຸດຊາດ, ເຮົາຫວັງຢ່າງຍິ່ງທີ່ຈະຮັບເອົາກຸ່ມຄົນທີ່ມີຈິດໃຈຄືກັນກັບເຮົາ. ໃນຂະນະດຽວກັນ, ເຮົາບໍ່ເຄີຍລືມຜູ້ທີ່ບໍ່ມີຈິດໃຈຄືກັນກັບເຮົາ; ເຮົາກຽດຊັງຄົນເຫຼົ່ານັ້ນຕະຫຼອດເວລາໃນໃຈຂອງເຮົາ, ລໍຖ້າໂອກາດທີ່ຈະລົງໂທດພວກເຂົາ ເຊິ່ງເຮົາຈະພໍໃຈທີ່ຈະໄດ້ເຫັນ. ຕອນນີ້ ໃນທີ່ສຸດແລ້ວ ມື້ຂອງເຮົາໄດ້ມາຮອດ ແລະ ເຮົາຈະບໍ່ລໍຖ້າອີກຕໍ່ໄປ!

ພາລະກິດສຸດທ້າຍຂອງເຮົາບໍ່ແມ່ນເພື່ອລົງໂທດມະນຸດພຽງເທົ່ານັ້ນ ແຕ່ຍັງແມ່ນເພື່ອຈັດແຈງຈຸດໝາຍປາຍທາງຂອງມະນຸດ. ຍິ່ງໄປກວ່ານັ້ນ, ມັນກໍແມ່ນເພື່ອວ່າ ທຸກຄົນຈະຮັບຮູ້ການກະທຳ ແລະ ການດຳເນີນການຂອງເຮົາ. ເຮົາຕ້ອງການໃຫ້ແຕ່ລະຄົນເຫັນວ່າທຸກສິ່ງທີ່ເຮົາໄດ້ກະທຳເປັນສິ່ງທີ່ຖືກຕ້ອງ ແລະ ທຸກສິ່ງທີ່ເຮົາໄດ້ກະທຳເປັນການສະແດງເຖິງອຸປະນິໄສຂອງເຮົາ. ມັນບໍ່ແມ່ນການກະທຳຂອງມະນຸດທີ່ໄດ້ສ້າງມະນຸດຊາດຂຶ້ນມາ ແລ້ວແຮງໄກທີ່ຈະເປັນການກະທຳຂອງທຳມະຊາດ, ແຕ່ແມ່ນເຮົາທີ່ເປັນຜູ້ບຳລຸງລ້ຽງສິ່ງມີຊີວິດທັງໝົດໃນການຊົງສ້າງ. ຖ້າປາສະຈາກການມີຢູ່ຂອງເຮົາ, ມະນຸດຊາດຈະດັບສູນ ແລະ ທົນທຸກກັບການລົງໂທດດ້ວຍໄພພິບັດຢ່າງຮ້າຍແຮງ. ບໍ່ມີມະນຸດຄົນໃດຈະເຫັນດວງ

ຕາເວັນ ແລະ ດວງເດືອນທີ່ສວຍງາມອີກ ຫຼື ໂລກສີຂຽວອີກ; ມະນຸດຊາດຈະພະເຊີນກັບກາງຄືນທີ່ໜາວຈັດ ແລະ ເຫວມືດແຫ່ງຄວາມຕາຍທີ່ບໍ່ມີຄວາມປານີ. ເຮົາຄືຄວາມລອດພົ້ນດຽວຂອງມະນຸດ. ເຮົາຄືຄວາມຫວັງດຽວຂອງມະນຸດ ແລະ ຍິ່ງໄປກວ່ານັ້ນ ເຮົາຄືພຣະອົງຜູ້ນັ້ນທີ່ການເປັນຢູ່ຂອງມະນຸດຊາດທັງໝົດໄດ້ນອນໃສ່. ຖ້າປາສະຈາກເຮົາແລ້ວ, ມະນຸດຊາດຈະຢຸດນິ້ງທັນທີ. ຖ້າປາສະຈາກເຮົາແລ້ວ, ມະນຸດຊາດຈະທົນທຸກກັບໄພພິບັດຢ່າງຮ້າຍແຮງ ແລະ ຖືກຜີຮ້າຍທຸກຮູບແບບຢຽບຢໍ່າທຳລາຍລົງ ເຖິງຈະບໍ່ມີຜູ້ໃດສົນໃຈເຮົາ. ເຮົາໄດ້ເຮັດພາລະກິດທີ່ບໍ່ມີຜູ້ໃດເຮັດໄດ້ ແລະ ຫວັງຢ່າງດຽວວ່າມະນຸດຈະສາມາດຕອບແທນເຮົາດ້ວຍການກະທຳບາງຢ່າງທີ່ດີ. ເຖິງວ່າຈະມີໜ້ອຍຄົນທີ່ສາມາດທີ່ຕອບແທນເຮົາ, ເຮົາຍັງຈະສິ້ນສຸດການເດີນທາງຂອງເຮົາໃນໂລກມະນຸດ ແລະ ເລີ່ມຂັ້ນຕອນຕໍ່ໄປຂອງພາລະກິດຂອງເຮົາທີ່ກຳລັງປາກົດໃຫ້ເຫັນ ເພາະວ່າການຝ້າວໄປມາຂອງເຮົາທ່າມກາງມະນຸດໃນໄລຍະຫຼາຍປີຜ່ານມາໄດ້ເກີດມີໝາກຜົນ ແລະ ເຮົາກໍເພິ່ງພໍໃຈຫຼາຍ. ສິ່ງທີ່ເຮົາສົນໃຈບໍ່ແມ່ນຈຳນວນຄົນ ແຕ່ເປັນການກະທຳຄວາມດີຂອງພວກເຂົາແທນ. ຢ່າງໃດກໍຕາມ, ເຮົາຫວັງວ່າ ພວກເຈົ້າຈະກະກຽມການກະທຳຄວາມດີທີ່ພຽງພໍເພື່ອຈຸດໝາຍປາຍທາງຂອງເຈົ້າ. ແລ້ວເຮົາກໍ່ຈະເພິ່ງພໍໃຈ; ຖ້າບໍ່ດັ່ງນັ້ນ, ຈະບໍ່ມີຄົນໃດໃນບັນດາພວກເຈົ້າທີ່ຈະໜີພົ້ນຈາກໄພພິບັດທີ່ຈະມາເຖິງພວກເຈົ້ານັ້ນໄດ້. ໄພພິບັດນັ້ນເກີດມາຈາກເຮົາ ແລະ ແນ່ນອນວ່າ ເຮົາເປັນຜູ້ປັ້ນແຕ່ງ. ຖ້າພວກເຈົ້າບໍ່ປາກົດວ່າດີພໍໃນສາຍຕາເຮົາ, ພວກເຈົ້າກໍຈະໜີບໍ່ພົ້ນຈາກການທົນທຸກໃນໄພພິບັດ. ໃນທ່າມກາງຄວາມລຳບາກ, ການປະພຶດ ແລະ ການກະທຳຂອງພວກເຈົ້າຍັງບໍ່ຖືວ່າເໝາະສົມຢ່າງສິ້ນເຊີງ ຍ້ອນຄວາມເຊື່ອ ແລະ ຄວາມຮັກຂອງພວກເຈົ້າຍັງບໍ່ພຽງພໍ ແລະ ພວກເຈົ້າພຽງແຕ່ສະແດງວ່າໂຕເອງວ່າຂີ້ອາຍ ຫຼື ເຂັ້ມແຂງເທົ່ານັ້ນ. ກ່ຽວກັບເລື່ອງນີ້, ເຮົາຈະຕັດສິນພຽງແຕ່ຄວາມດີ ແລະ ຄວາມຊົ່ວ. ເຮົາສືບຕໍ່ກັງວົນກັບແນວທາງທີ່ພວກເຈົ້າແຕ່ລະຄົນປະຕິບັດ ແລະ ສະແດງຕົວເອງ ບົນພື້ນຖານທີ່ເຮົາຈະກຳນົດຈຸດຈົບຂອງພວກເຈົ້າ. ເຖິງຢ່າງໃດກໍຕາມ, ເຮົາຕ້ອງເຮັດໃຫ້ຊັດເຈນວ່າ: ເຮົາຈະບໍ່ມີຄວາມເມດຕາຕໍ່ບັນດາຜູ້ທີ່ບໍ່ສະແດງຄວາມຈົງຮັກພັກດີຕໍ່ເຮົາໃນຊ່ວງເວລາແຫ່ງຄວາມລຳບາກອີກຕໍ່ໄປ, ເພາະວ່າຄວາມເມດຕາຂອງເຮົາມີຂອບເຂດ. ນອກຈາກນີ້, ເຮົາບໍ່ມັກຜູ້ທີ່ທໍລະຍົດຕໍ່ເຮົາແມ່ນແຕ່ເທື່ອດຽວ, ແລ້ວແຮງໄກທີ່ເຮົາຈະມັກພົວພັນກັບຄົນຂາຍຜົນປະໂຫຍດຂອງໝູ່ເພື່ອນຂອງພວກເຂົາ. ນີ້ແມ່ນອຸປະນິໄສຂອງເຮົາ ບໍ່ວ່າຄົນນັ້ນແມ່ນໃຜກໍຕາມ. ເຮົາຕ້ອງບອກພວກເຈົ້າກ່ຽວກັບສິ່ງນີ້ວ່າ: ຜູ້ໃດທີ່ເຮັດໃຫ້ເຮົາເສຍໃຈຈະບໍ່ໄດ້ຮັບໂອກາດຄັ້ງທີສອງຈາກເຮົາ ແລະ ຜູ້ໃດທີ່ຊື່ສັດຕໍ່ເຮົາກໍຈະຢູ່ໃນໃຈຂອງເຮົາຕະຫຼອດໄປ.

# ເຈົ້າຈິງຮັກພັກດີຕໍ່ຜູ້ໃດ?

ໃນຕອນນີ້ ແຕ່ລະມື້ທີ່ພວກເຈົ້າດຳເນີນຊີວິດຢູ່ແມ່ນສຳຄັນຫຼາຍ ແລະ ມີຄວາມສຳຄັນທີ່ສຸດຕໍ່ຈຸດໝາຍປາຍທາງຂອງພວກເຈົ້າ ແລະ ຊະຕາກຳຂອງພວກເຈົ້າ. ເພາະສະນັ້ນ ພວກເຈົ້າຈຳເປັນຕ້ອງຖະໜອມທຸກສິ່ງທີ່ພວກເຈົ້າມີໃນມື້ນີ້ ແລະ ເຫັນຄຸນຄ່າໃນທຸກນາທີທີ່ຜ່ານໄປ. ເຈົ້າຕ້ອງໃຊ້ເວລາຂອງເຈົ້າໃຫ້ຄຸ້ມຄ່າເພື່ອໃຫ້ຕົວຂອງເຈົ້າເອງໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດ ເພື່ອວ່າເຈົ້າຈະບໍ່ໄດ້ໃຊ້ຊີວິດນີ້ຢ່າງສູນເປົ່າ. ພວກເຈົ້າອາດຈະຮູ້ສຶກສັບສົນວ່າ ເປັນຫຍັງເຮົາຈຶ່ງເວົ້າຄຳເຫຼົ່ານີ້ອອກມາ. ເວົ້າກົງໆກໍຄື ເຮົາເອງກໍບໍ່ພໍໃຈກັບພຶດຕິກຳຂອງພວກເຈົ້າຜູ້ໃດຜູ້ໜຶ່ງເລີຍ ເພາະຄວາມຫວັງທີ່ເຮົາມີຕໍ່ພວກເຈົ້າບໍ່ແມ່ນສິ່ງທີ່ພວກເຈົ້າເປັນຢູ່ໃນທຸກມື້ນີ້. ສະນັ້ນ ເຮົາຈຶ່ງສາມາດເວົ້າໄດ້ເລີຍວ່າ: ພວກເຈົ້າແຕ່ລະຄົນແມ່ນຢູ່ໃກ້ກັບອັນຕະລາຍ ແລະ ການຮ້ອງໄຫ້ໃນອະດີດເພື່ອຂໍຄວາມຊ່ວຍເຫຼືອ ແລະ ຄວາມປາຖະໜາໃນແຕ່ກ່ອນທີ່ຈະສະແຫວງຫາຄວາມຈິງ ແລະ ສະແຫວງຫາຄວາມສະຫວ່າງແມ່ນໃກ້ຈະສິ້ນສຸດລົງແລ້ວ. ນີ້ຄືການສະແດງເຖິງການຕອບແທນຄັ້ງສຸດທ້າຍຂອງພວກເຈົ້າ ແລະ ມັນເປັນສິ່ງທີ່ເຮົາບໍ່ເຄີຍຄາດຫວັງເລີຍ. ເຮົາບໍ່ປາຖະໜາທີ່ຈະເວົ້າໃນສິ່ງທີ່ຂັດກັບຂໍ້ແທ້ຈິງ, ຍ້ອນພວກເຈົ້າໄດ້ເຮັດໃຫ້ເຮົາຜິດຫວັງຫຼາຍ. ບາງເທື່ອ ພວກເຈົ້າປາຖະໜາທີ່ຍອມຮັບເອົາສິ່ງນີ້ໂດຍບໍ່ຕໍ່ສູ້, ບໍ່ຕ້ອງການຜະເຊີນກັບຄວາມເປັນຈິງ, ແຕ່ເຮົາກໍຕ້ອງຖາມເຈົ້າເຖິງສິ່ງນີ້ຢ່າງຈິງຈັງ: ໃນຫຼາຍປີເຫຼົ່ານີ້, ຫົວໃຈຂອງພວກເຈົ້າແມ່ນເຕັມໄປດ້ວຍຫຍັງ? ຫົວໃຈຂອງພວກເຈົ້າຈິງຮັກພັກດີຕໍ່ຜູ້ໃດ? ຢ່າເວົ້າວ່າຄຳຖາມເຫຼົ່ານີ້ແມ່ນກະທັນຫັນເກີນໄປ ແລະ ຢ່າຖາມເຮົາວ່າເປັນຫຍັງເຮົາຈຶ່ງຕັ້ງຄຳຖາມແບບນີ້. ໃຫ້ຮູ້ວ່າ: ມັນເປັນເພາະເຮົາຮູ້ຈັກພວກເຈົ້າດີຫຼາຍ, ເປັນຫ່ວງເປັນໄຍພວກເຈົ້າຫຼາຍ ແລະ ທຸ້ມເທຫຼາຍຢ່າງໃນຫົວໃຈຂອງເຮົາເຂົ້າໃນພຶດຕິກຳ ແລະ ການກະທຳຂອງພວກເຈົ້າ, ເຮົາຈຶ່ງຕັ້ງຄຳຖາມກັບພວກເຈົ້າຢ່າງບໍ່ຢຸດຢັ້ງ ແລະທົນທຸກຕໍ່ຄວາມຍາກລຳບາກອັນຂົມຂື່ນ. ແຕ່ປານນັ້ນ ເຈົ້າກໍບໍ່ໄດ້ຕອບແທນເຮົາດ້ວຍຫຍັງ ນອກຈາກຄວາມເສີຍເມີຍ ແລະ ການຈາກໄປທີ່ທົນຮັບບໍ່ໄດ້. ພວກເຈົ້າບໍ່ລະມັດລະວັງຕໍ່ເຮົາ; ມັນເປັນໄປໄດ້ບໍວ່າເຮົາຮູ້ຈັກຫຍັງເລີຍ? ຖ້ານີ້ຄືສິ່ງທີ່ພວກເຈົ້າເຊື່ອ, ມັນກໍຍິ່ງພິສູດຂໍ້ແທ້ຈິງທີ່ວ່າ ພວກເຈົ້າບໍ່ໄດ້ປະຕິບັດຕໍ່ເຮົາດ້ວຍຄວາມເມດຕາຢ່າງແທ້ຈິງ. ແລ້ວສະນັ້ນ ເຮົາຈຶ່ງເວົ້າວ່າ ພວກເຈົ້າກຳລັງຝັງຫົວຂອງພວກເຈົ້າໃນດິນຊາຍ. ພວກເຈົ້າທຸກຄົນແມ່ນສະຫຼາດຫຼາຍ ຈົນພວກເຈົ້າເຖິງກັບບໍ່ຮູ້ວ່າຕົນເອງກຳລັງເຮັດຫຍັງຢູ່, ແລ້ວພວກເຈົ້າຈະໃຊ້ຫຍັງເພື່ອອະທິບາຍໃຫ້ກັບເຮົາ?

ຄຳຖາມທີ່ເຮົາສົນໃຈທີ່ສຸດກໍຄື ຫົວໃຈຂອງພວກເຈົ້າຈິງຮັກພັກດີຕໍ່ຜູ້ໃດແທ້ໆ. ເຮົາຫວັງເຊັ່ນກັນວ່າໃຫ້ພວກເຈົ້າແຕ່ລະຄົນພະຍາຍາມລະດົມຄວາມຄິດຂອງພວກເຈົ້າ ແລະ ຖາມຕົນເອງວ່າພວກເຈົ້າຈິງຮັກພັກດີຕໍ່ຜູ້ໃດ ແລະ ພວກເຈົ້າມີຊີວິດຢູ່ເພື່ອຜູ້ໃດ. ບາງເທື່ອ ພວກເຈົ້າບໍ່ເຄີຍຄິດຄຳນຶງເຖິງຄຳຖາມເຫຼົ່ານີ້ຢ່າງຖີ່ຖ້ວນ, ສະນັ້ນ ເຮົາຂໍເປີດເຜີຍຄຳຕອບໃຫ້ແກ່ພວກເຈົ້າ ດີບໍ?

ຜູ້ໃດກໍຕາມທີ່ມີຄວາມຊົງຈຳກໍຈະຮັບຮູ້ຂໍ້ແທ້ຈິງນີ້: ມະນຸດແມ່ນດຳລົງຊີວິດເພື່ອຕົນເອງ ແລະຈິງຮັກພັກດີຕໍ່ຕົນເອງ. ເຮົາບໍ່ເຊື່ອວ່າຄຳຕອບຂອງພວກເຈົ້ານັ້ນຈະຖືກທັງໝົດ ເພາະພວກເຈົ້າແຕ່ລະ

ຄົນຢູ່ເພື່ອຊີວິດຂອງໃຜລາວ ແຕ່ລະຄົນດີ້ນລົນກັບຄວາມທຸກຂອງພວກເຈົ້າເອງ. ດັ່ງນັ້ນ ພວກເຈົ້າຈົ່ງຮັກພັກດີຕໍ່ຜູ້ຄົນທີ່ພວກເຈົ້າຮັກ ແລະ ສິ່ງທີ່ເຮັດໃຫ້ພວກເຈົ້າເພິ່ງພໍໃຈ; ພວກເຈົ້າບໍ່ໄດ້ຈົງຮັກພັກດີຕໍ່ຕົນເອງແທ້ໆ. ເພາະພວກເຈົ້າແຕ່ລະຄົນໄດ້ຮັບອິດທິພົນມາຈາກຜູ້ຄົນ, ເຫດການ ແລະ ວັດຖຸທີ່ຢູ່ອ້ອມຂ້າງພວກເຈົ້າ, ພວກເຈົ້າຈຶ່ງບໍ່ໄດ້ຈົງຮັກພັກດີຕໍ່ຕົນເອງຢ່າງແທ້ຈິງ. ເຮົາກ່າວພຣະທຳເຫຼົ່ານີ້ ບໍ່ແມ່ນເພື່ອສົ່ງເສີມໃຫ້ພວກເຈົ້າຈົງຮັກພັກດີຕໍ່ຕົນເອງ, ແຕ່ເພື່ອເປີດໂປງຄວາມຈົງຮັກພັກດີຂອງພວກເຈົ້າຕໍ່ສິ່ງໃດສິ່ງໜຶ່ງ, ເພາະວ່າຕະຫຼອດໄລຍະເວລາຫຼາຍປີນີ້, ເຮົາບໍ່ເຄີຍໄດ້ຮັບຄວາມຈົງຮັກພັກດີຈາກພວກເຈົ້າຜູ້ໃດຜູ້ໜຶ່ງເລີຍ. ພວກເຈົ້າໄດ້ຕິດຕາມເຮົາມາເປັນເວລາຫຼາຍປີ ແຕ່ບໍ່ເຄີຍໄດ້ມອບຄວາມຈົງຮັກພັກດີໃຫ້ແກ່ເຮົາແມ່ນແຕ່ພຽງເລັກນ້ອຍ. ໃນທາງກົງກັນຂ້າມ ພວກເຈົ້າແມ່ນຕິດພັນອ້ອມຂ້າງຄົນທີ່ພວກເຈົ້າຮັກ ແລະ ສິ່ງຕ່າງໆທີ່ເຮັດໃຫ້ພວກເຈົ້າເພິ່ງພໍໃຈ, ຫຼາຍຈົນເກືອບທຸກເວລາ ແລະ ບໍ່ວ່າຈະຢູ່ໃສກໍຕາມທີ່ເຈົ້າໄປ, ເຈົ້າກໍຮັກສາພວກເຂົາໄວ້ໃກ້ຫົວໃຈຂອງພວກເຈົ້າ ແລະ ບໍ່ເຄີຍປະຖິ້ມພວກເຂົາ. ໃນເວລາໃດກໍຕາມທີ່ພວກເຈົ້າມີຄວາມກະຕືລືລົ້ນ ຫຼື ຫຼົງໄຫຼກັບສິ່ງໃດສິ່ງໜຶ່ງທີ່ພວກເຈົ້າຮັກ, ມັນກໍເກີດຂຶ້ນໃນຂະນະທີ່ພວກເຈົ້າກຳລັງຕິດຕາມເຮົາ ຫຼື ແມ່ນແຕ່ໃນຂະນະທີ່ພວກເຈົ້າຟັງພຣະທຳຂອງເຮົາ. ສະນັ້ນ ເຮົາຈຶ່ງເວົ້າໄດ້ວ່າ ພວກເຈົ້າກຳລັງໃຊ້ຄວາມຈົງຮັກພັກດີ ທີ່ເຮົາຮຽກຮ້ອງຈາກພວກເຈົ້າ ເພື່ອຈົງຮັກພັກດີ ແລະ ຖະໜອມໃນ “ສັດລ້ຽງ” ຂອງພວກເຈົ້າແທນ. ເຖິງແມ່ນວ່າພວກເຈົ້າອາດຈະເສຍສະຫຼະສິ່ງໜຶ່ງ ຫຼື ສອງສິ່ງໃຫ້ແກ່ເຮົາ, ມັນກໍບໍ່ໄດ້ເປັນຕົວແທນໃຫ້ແກ່ພວກເຈົ້າທຸກຄົນ ແລະ ບໍ່ໄດ້ສະແດງໃຫ້ເຫັນວ່າເຮົາຄືຜູ້ທີ່ພວກເຈົ້າມີຄວາມຈົງຮັກພັກດີຕໍ່ຢ່າງແທ້ຈິງ. ພວກເຈົ້າເຮັດໃຫ້ຕົນເອງຕິດພັນກັບພາລະໜ້າທີ່ທີ່ພວກເຈົ້າຫຼົງໄຫຼ: ບາງຄົນຈົງຮັກພັກດີຕໍ່ລູກຊາຍ ແລະ ລູກສາວ, ຄົນອື່ນກໍຈົງຮັກພັກດີຕໍ່ຜົວ, ເມຍ, ຄວາມຮັ່ງມີ, ວຽກງານ, ຫົວໜ້າ, ສະຖານະ ຫຼື ແມ່ຍິງ. ພວກເຈົ້າບໍ່ເຄີຍຮູ້ສຶກເມື່ອຍ ຫຼື ເບື່ອຕໍ່ສິ່ງຕ່າງໆທີ່ເຈົ້າຈົງຮັກພັກດີ; ແຕ່ໃນທາງກົງກັນຂ້າມພວກເຈົ້າຍິ່ງມີຄວາມຕ້ອງການຫຼາຍຂຶ້ນທີ່ຈະມີສິ່ງເຫຼົ່ານີ້ໃນປະລິມານຫຼາຍຂຶ້ນ ຫຼື ຄຸນນະພາບສູງຂຶ້ນ ແລະ ເຈົ້າກໍບໍ່ເຄີຍຍອມແພ້. ເຮົາ ແລະ ພຣະທຳຂອງເຮົາຖືກດັນໃຫ້ຢູ່ເບື້ອງຫຼັງສິ່ງຕ່າງໆທີ່ພວກເຈົ້າຫຼົງໄຫຼ. ແລ້ວພວກເຈົ້າບໍ່ມີທາງເລືອກ ນອກຈາກຈະຈັດລຳດັບເຮົາ ແລະ ພຣະທຳໃຫ້ເປັນສິ່ງສຸດທ້າຍ. ເຖິງກັບມີຄົນທີ່ປ່ອຍຕຳແໜ່ງສຸດທ້າຍນີ້ໄວ້ສຳລັບສິ່ງຕ່າງໆທີ່ພວກເຂົາຈົງຮັກພັກດີ ເຊິ່ງພວກເຂົາບໍ່ທັນໄດ້ຄົ້ນພົບເທື່ອ. ບໍ່ເຄີຍມີຮ່ອງຮອຍຂອງເຮົາແມ່ນແຕ່ໜ້ອຍດຽວໃນຫົວໃຈຂອງພວກເຂົາ. ພວກເຈົ້າອາດຄິດວ່າເຮົາຮຽກຮ້ອງຈາກພວກເຈົ້າຫຼາຍເກີນໄປ ຫຼື ກ່າວຫາພວກເຈົ້າຢ່າງບໍ່ຖືກຕ້ອງ, ແຕ່ພວກເຈົ້າເຄີຍຄິດເຖິງຂໍ້ແທ້ຈິງທີ່ວ່າ ໃນຂະນະທີ່ພວກເຈົ້າໃຊ້ເວລາຢ່າງມີຄວາມສຸກກັບຄອບຄົວຂອງພວກເຈົ້ານັ້ນ, ພວກເຈົ້າບໍ່ເຄີຍຈົງຮັກພັກດີຕໍ່ເຮົາຈັກເທື່ອບໍ? ໃນເວລາແບບນີ້, ມັນບໍ່ໄດ້ເຮັດໃຫ້ພວກເຈົ້າເຈັບປວດບໍ? ເມື່ອຫົວໃຈຂອງພວກເຈົ້າເຕັມໄປດ້ວຍຄວາມປິຕິຍິນດີ ແລະ ພວກເຈົ້າໄດ້ຮັບລາງວັນສຳລັບການເຮັດວຽກໜັກຂອງພວກເຈົ້າ, ພວກເຈົ້າບໍ່ຮູ້ສຶກທໍ້ໃຈບໍ ທີ່ພວກເຈົ້າບໍ່ໄດ້ຮັບເອົາຄວາມຈິງຢ່າງພຽງພໍ? ມີຄັ້ງໃດແດ່ທີ່ພວກເຈົ້າຮ້ອງໄຫ້ເສຍໃຈທີ່ບໍ່ໄດ້ຮັບການເຫັນດີຈາກເຮົາ? ພວກເຈົ້າພະຍາຍາມຄິດຢ່າງໜັກ ແລະ ມີຄວາມເຈັບປວດອັນໃຫຍ່ຫຼວງເພື່ອເຫັນແກ່ລູກຊາຍ ແລະ

ລູກສາວຂອງພວກເຈົ້າ, ແຕ່ພວກເຈົ້າກໍຍັງບໍ່ພໍໃຈ; ພວກເຈົ້າຍັງເຊື່ອວ່າຕົນເອງບໍ່ໄດ້ດູໝັ່ນແທນພວກເຂົາ, ພວກເຈົ້າບໍ່ໄດ້ເຮັດທຸກສິ່ງທີ່ພວກເຈົ້າສາມາດເຮັດໄດ້ເພື່ອພວກເຂົາ. ເຖິງຢ່າງໃດກໍຕາມສຳລັບເຮົາແລ້ວ ພວກເຈົ້າແມ່ນບໍ່ລະມັດລະວັງ ແລະ ບໍ່ໄດ້ເອົາໃຈໃສ່ຢູ່ສະເໝີ; ເຮົາພຽງແຕ່ຢູ່ໃນຄວາມຊົງຈຳຂອງພວກເຈົ້າ, ແຕ່ເຮົາບໍ່ເຄີຍໄດ້ທົນຢູ່ໃນຫົວໃຈຂອງພວກເຈົ້າເລີຍ. ພວກເຈົ້າບໍ່ເຄີຍຮູ້ສຶກເຖິງການອຸທິດ ແລະ ຄວາມພະຍາຍາມຂອງເຮົາຢູ່ຕະຫຼອດໄປ ແລະ ພວກເຈົ້າບໍ່ເຄີຍຊື່ນຊົມພວກມັນເລີຍ. ພວກເຈົ້າພຽງແຕ່ໄຕ່ຕອງສັ້ນໆ ແລະ ເຊື່ອວ່າສິ່ງນີ້ພຽງພໍແລ້ວ. “ຄວາມຈົງຮັກພັກດີ” ດັ່ງກ່າວບໍ່ແມ່ນສິ່ງທີ່ເຮົາປາຖະໜາ, ແຕ່ເປັນສິ່ງທີ່ເຮົາກຽດຊັງຕະຫຼອດມາ. ຢ່າງໃດກໍຕາມ ບໍ່ວ່າເຮົາຈະເວົ້າຫຍັງໄປ ພວກເຈົ້າກໍຈະສືບຕໍ່ຮັບເອົາແຕ່ໜຶ່ງ ຫຼື ສອງສິ່ງ; ພວກເຈົ້າບໍ່ສາມາດຮັບເອົາສິ່ງນີ້ໄດ້ທັງໝົດ, ຍ້ອນພວກເຈົ້າທຸກຄົນ “ໝັ້ນໃຈ” ຫຼາຍ ແລະ ພວກເຈົ້າເລືອກ ແລະ ຮັບເອົາສິ່ງທີ່ຍອມຮັບຈາກພຣະທຳທີ່ເຮົາໄດ້ກ່າວອອກໄປຢູ່ສະເໝີ. ຖ້າພວກເຈົ້າຍັງເປັນແບບນີ້ຢູ່ໃນປັດຈຸບັນ, ເຮົາກໍມີວິທີການບາງຢ່າງເພື່ອຈັດການກັບຄວາມໝັ້ນໃຈໃນຕົນເອງຂອງພວກເຈົ້າ ແລະ ຍິ່ງໄປກວ່ານັ້ນ ເຮົາຈະເຮັດໃຫ້ພວກເຈົ້າຮັບຮູ້ວ່າ ພຣະທຳທັງໝົດຂອງເຮົາແມ່ນເປັນຈິງ ແລະ ບໍ່ມີພຣະທຳອັນໃດທີ່ບິດເບືອນຄວາມຈິງເລີຍ.

ຖ້າຫາກຕອນນີ້ເຮົາເອົາເງິນຈຳນວນໜຶ່ງມາວາງໄວ້ຢູ່ຕໍ່ໜ້າຂອງພວກເຈົ້າ ແລະ ໃຫ້ພວກເຈົ້າມີອິດສະຫຼະທີ່ຈະເລືອກ ແລະ ຖ້າເຮົາບໍ່ໄດ້ກ່າວໂທດພວກເຈົ້າສຳລັບການຕັດສິນໃຈຂອງພວກເຈົ້າ, ແລ້ວຄົນສ່ວນໃຫຍ່ກໍຈະເລືອກເງິນ ແລະ ປະຖິ້ມຄວາມຈິງ. ຜູ້ທີ່ດີແດ່ໃນບັນດາພວກເຈົ້າກໍອາດຈະສະຫຼະເງິນ ແລະ ເລືອກຄວາມຈິງຢ່າງບໍ່ເຕັມໃຈ, ໃນຂະນະທີ່ ຜູ້ທີ່ຢູ່ໃນລະຫວ່າງກາງກໍຈະຄວ້າເອົາເງິນໄວ້ໃນມືຂ້າງໜຶ່ງ ແລະ ຄວາມຈິງໄວ້ອີກຂ້າງ. ເມື່ອເປັນເຊັ່ນນີ້ ທາດແທ້ຂອງພວກເຈົ້າຈະບໍ່ຊັດເຈນໃນຕົວມັນເອງບໍ? ເມື່ອກຳລັງເລືອກລະຫວ່າງຄວາມຈິງ ແລະ ສິ່ງໃດໜຶ່ງທີ່ພວກເຈົ້າຕ້ອງຈົງຮັກພັກດີ, ພວກເຈົ້າທຸກຄົນກໍຈະຕັດສິນໃຈໄປໃນທຳນອງນັ້ນ ແລະ ທ່າທີຂອງພວກເຈົ້າກໍຈະຍັງຄືເກົ່າ. ມັນບໍ່ແມ່ນແບບນັ້ນບໍ? ບໍ່ໄດ້ມີຫຼາຍ ຄົນໃນບັນດາພວກເຈົ້າບໍທີ່ສັບໄປສັບມາລະຫວ່າງສິ່ງທີ່ຖືກຕ້ອງ ແລະ ສິ່ງທີ່ຜິດ? ໃນການແຂ່ງຂັນລະຫວ່າງສິ່ງທີ່ດີ ແລະ ສິ່ງທີ່ບໍ່ດີ, ສີດຳ ແລະ ສີຂາວ, ແນ່ນອນ ພວກເຈົ້າຈະຮູ້ຈັກເຖິງທາງເລືອກທີ່ພວກເຈົ້າໄດ້ຕັດສິນໃຈລະຫວ່າງຄອບຄົວ ແລະ ພຣະເຈົ້າ, ລູກໆ ແລະ ພຣະເຈົ້າ, ສັນຕິສຸກ ແລະ ຄວາມແຕກແຍກ, ຄວາມຮັ່ງມີ ແລະ ຄວາມທຸກຍາກ, ສະຖານະ ແລະ ຄວາມສາມັນທຳມະດາ, ການຖືກສະໜັບສະໜູນ ແລະ ການຖືກປະຖິ້ມ ແລະ ອື່ນໆ. ລະຫວ່າງຄອບຄົວທີ່ມີສັນຕິສຸກ ແລະ ຄອບຄົວທີ່ແຕກແຍກ, ພວກເຈົ້າກໍເລືອກອັນທີ່ຢູ່ກ່ອນໜ້າ ແລະ ເຈົ້າເລືອກໂດຍບໍ່ລັງເລໃຈ; ລະຫວ່າງຄວາມຮັ່ງມີ ແລະ ໜ້າທີ່, ພວກເຈົ້າກໍເລືອກສິ່ງທີ່ມາກ່ອນໜ້າ ເຖິງກັບຂາດຄວາມເຕັມໃຈທີ່ຈະກັບຄືນຝັ່ງ[ກ]; ລະຫວ່າງຄວາມຫຼູຫຼາ ແລະ ຄວາມທຸກຍາກ, ພວກເຈົ້າກໍເລືອກອັນກ່ອນໜ້າ; ແລະ ລະຫວ່າງລູກຊາຍ, ລູກສາວ, ເມຍ ແລະ ຜົວ ແລະ ເຮົາ, ພວກເຈົ້າກໍເລືອກ

ກ ກັບຄືນຝັ່ງ: ເປັນສຳນວນຂອງພາສາຈີນ, ເຊິ່ງໝາຍເຖິງ “ກັບຕົວຈາກຫົນທາງທີ່ຊົ່ວຮ້າຍຂອງຜູ້ໃດຜູ້ໜຶ່ງ”.

ສິ່ງທີ່ຢູ່ກ່ອນໜ້າ; ແລະ ລະຫວ່າງແນວຄິດ ແລະ ຄວາມຈິງ, ພວກເຈົ້າກໍຈະເລືອກອັນກ່ອນໜ້າອີກ. ເມື່ອພົບພໍ້ກັບການກະທຳອັນຊົ່ວຮ້າຍທຸກຮູບແບບຂອງພວກເຈົ້າ, ເຮົາພຽງແຕ່ແມ່ນໝົດສັດທາໃນຕົວຂອງພວກເຈົ້າ. ມັນພຽງແຕ່ເຮັດໃຫ້ເຮົາປະຫຼາດໃຈວ່າ ຫົວໃຈຂອງພວກເຈົ້ານັ້ນຕໍ່ຕ້ານທີ່ຈະຖືກເຮັດໃຫ້ອ່ອນໂຍນ. ການອຸທິດ ແລະ ຄວາມພະຍາຍາມເປັນເວລາຫຼາຍປີບໍ່ໄດ້ນຳຫຍັງເລີຍມາເຖິງເຮົານອກຈາກການປະຖິ້ມ ແລະ ຄວາມສິ້ນຫວັງຂອງພວກເຈົ້າ, ແຕ່ຄວາມຫວັງຂອງເຮົາທີ່ມີຕໍ່ພວກເຈົ້າກໍນັບມື້ນັບເພີ່ມຂຶ້ນເລື້ອຍໆ ເພາະມື້ຂອງເຮົາໄດ້ຖືກເປີດເຜີຍຕໍ່ໜ້າທຸກຄົນໝົດແລ້ວ. ເຖິງຢ່າງນັ້ນກໍຕາມ ພວກເຈົ້າກໍຍັງສືບຕໍ່ສະແຫວງຫາສິ່ງທີ່ມືດມົວ ແລະ ຊົ່ວຮ້າຍ ແລະ ປະຕິເສດທີ່ຈະປ່ອຍວາງພວກມັນ. ດັ່ງນັ້ນ ຜົນໄດ້ຮັບຂອງພວກເຈົ້າຈະເປັນແນວໃດ? ພວກເຈົ້າໄດ້ພິຈາລະນາສິ່ງນີ້ຢ່າງລະອຽດກ່ອນແລ້ວບໍ? ຖ້າໃຫ້ພວກເຈົ້າເລືອກອີກຄັ້ງ, ແລ້ວຕຳແໜ່ງຂອງພວກເຈົ້າຈະແມ່ນຫຍັງ? ພວກເຈົ້າຍັງຈະເລືອກອັນກ່ອນໜ້າຢູ່ບໍ? ພວກເຈົ້າຍັງຈະນຳຄວາມຜິດຫວັງ ແລະ ຄວາມເສົ້າເສຍໃຈທີ່ເປັນຕາໜ້າສົມເພດມາສູ່ເຮົາຢູ່ບໍ? ຫົວໃຈຂອງພວກເຈົ້າຍັງຈະມີຄວາມອົບອຸ່ນພຽງເລັກນ້ອຍຢູ່ບໍ? ພວກເຈົ້າຈະຍັງບໍ່ຮູ້ຈັກສິ່ງທີ່ຈະຕ້ອງເຮັດເພື່ອເຮັດໃຫ້ເຮົາສະບາຍໃຈຢູ່ບໍ? ໃນຊ່ວງເວລານີ້ ພວກເຈົ້າຈະເລືອກຫຍັງ? ພວກເຈົ້າຈະຍອມຕໍ່ພຣະທຳຂອງເຮົາ ຫຼື ຈະໝົດຄວາມສົນໃຈກັບມັນ? ມື້ຂອງເຮົາໄດ້ຖືກວາງອອກຕໍ່ສາຍຕາຂອງພວກເຈົ້າທຸກຄົນແລ້ວ ແລະ ສິ່ງທີ່ພວກເຈົ້າເຫັນກໍຄືຊີວິດໃໝ່ ແລະ ຈຸດເລີ່ມຕົ້ນໃໝ່. ຢ່າງໃດກໍຕາມ ເຮົາຕ້ອງບອກພວກເຈົ້າວ່າ ຈຸດເລີ່ມຕົ້ນໃໝ່ນີ້ບໍ່ແມ່ນການເລີ່ມຕົ້ນຂອງພາລະກິດໃໝ່ຈາກອະດີດ ແຕ່ເປັນການສິ້ນສຸດພາລະກິດເກົ່າ. ນັ້ນໝາຍຄວາມວ່າ ນີ້ແມ່ນການກະທຳຄັ້ງສຸດທ້າຍ. ເຮົາຄິດວ່າ ພວກເຈົ້າທຸກຄົນຈະເຂົ້າໃຈໃນສິ່ງທີ່ບໍ່ເປັນປົກກະຕິກ່ຽວກັບຈຸດເລີ່ມຕົ້ນນີ້. ເຖິງຢ່າງໃດກໍຕາມ ໃນມື້ໜຶ່ງອີກບໍ່ດົນ ພວກເຈົ້າຈະເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງຈຸດເລີ່ມຕົ້ນນີ້, ສະນັ້ນ ພວກເຮົາຜ່ານຜ່າມັນໄປຮ່ວມກັນ ແລະ ຕ້ອນຮັບຕອນສຸດທ້າຍທີ່ຈະມາເຖິງ! ແນວໃດກໍຕາມ ສິ່ງທີ່ສືບຕໍ່ເຮັດໃຫ້ເຮົາເປັນກັງວົນກ່ຽວກັບພວກເຈົ້າກໍຄື ເມື່ອຜະເຊີນກັບຄວາມບໍ່ຍຸຕິທຳ ແລະ ຄວາມຍຸຕິທຳ, ພວກເຈົ້າເລືອກອັນກ່ອນໜ້າຢູ່ສະເໝີ. ເຖິງແນວໃດກໍຕາມ ສິ່ງນັ້ນລ້ວນແລ້ວແຕ່ຢູ່ໃນອະດີດຂອງພວກເຈົ້າ. ເຮົາກໍຫວັງເຊັ່ນກັນວ່າ ຈະລືມທຸກສິ່ງໃນອະດີດຂອງພວກເຈົ້າ, ເຖິງວ່າສິ່ງນີ້ຈະເຮັດໄດ້ຍາກ. ເຖິງຢ່າງໃດກໍຕາມ ເຮົາກໍມີວິທີການທີ່ດີທີ່ຈະເຮັດໃຫ້ມັນສຳເລັດ: ໃຫ້ອະນາຄົດມາທົດແທນອະດີດ ແລະ ປ່ອຍໃຫ້ເງົາມືດໃນອະດີດຂອງພວກເຈົ້າຖືກປັດເປົ່າອອກໄປເພື່ອແລກປ່ຽນກັບຕົວຕົນທີ່ແທ້ຈິງຂອງພວກເຈົ້າໃນມື້ນີ້. ດັ່ງນັ້ນ ເຮົາຕ້ອງລົບກວນໃຫ້ພວກເຈົ້າຕັດສິນໃຈອີກຄັ້ງ: ແລ້ວພວກເຈົ້າຈິງຮັກພັກດີຕໍ່ໃຜແທ້ໆ?

# ວ່າດ້ວຍເລື່ອງຈຸດໝາຍປາຍທາງ

ເມື່ອໃດກໍຕາມທີ່ເວົ້າເຖິງຈຸດໝາຍປາຍທາງ ພວກເຈົ້າປະຕິບັດກັບມັນດ້ວຍຄວາມຈິງຈັງເປັນພິເສດ; ຍິ່ງໄປກວ່ານັ້ນ, ມັນເປັນສິ່ງທີ່ພວກເຈົ້າທຸກຄົນຄວນລະມັດລະວັງເປັນພິເສດ. ພວກເຈົ້າບາງຄົນບໍ່ສາມາດລໍຖ້າທີ່ຈະກົ້ມກາບລົງພື້ນ, ຄຸເຂົ່າໃຫ້ກັບພຣະເຈົ້າເພື່ອລົງເອີຍດ້ວຍຈຸດໝາຍປາຍທາງທີ່ດີ. ເຮົາສາມາດພິສູດຄວາມກະຕືລືລົ້ນຂອງພວກເຈົ້າ ເຊິ່ງບໍ່ຈໍາເປັນຕ້ອງສະແດງອອກເປັນຄໍາເວົ້າກໍໄດ້. ພວກເຈົ້າບໍ່ຕ້ອງການໃຫ້ເນື້ອໜັງຂອງພວກເຈົ້າຕົກລົງສູ່ໄພພິບັດຢ່າງແນ່ນອນ ແລະ ຍິ່ງໄປກວ່ານັ້ນພວກເຈົ້າບໍ່ຕ້ອງການຖືກລົງໂທດນິລັນດອນໃນອະນາຄົດ. ພວກເຈົ້າພຽງແຕ່ຫວັງທີ່ຈະດໍາລົງຊີວິດຢ່າງລຽບງ່າຍ ແລະ ເປັນອິດສະຫຼະຫຼາຍຂຶ້ນ. ແລ້ວສະນັ້ນ ພວກເຈົ້າຈຶ່ງຮູ້ສຶກກັງວົນໃຈເປັນພິເສດ ເມື່ອໃດກໍຕາມທີ່ເວົ້າເຖິງຈຸດໝາຍປາຍທາງ ໂດຍຢ້ານຢູ່ເລິກໆວ່າ ຖ້າພວກເຈົ້າບໍ່ຕັ້ງໃຈພໍ ພວກເຈົ້າອາດຈະລ່ວງເກີນພຣະເຈົ້າ ແລະ ຍ້ອນເຫດນັ້ນ ຈະປະສົບກັບຜົນກໍາສະໜອງທີ່ສົມຄວນ. ພວກເຈົ້າບໍ່ລັງເລທີ່ຈະອ່ອນນ້ອມເພື່ອເຫັນແກ່ຈຸດໝາຍປາຍທາງຂອງພວກເຈົ້າ ແລະ ພວກເຈົ້າທັງຫຼາຍທີ່ເຄີຍຄົດໂກງ ແລະ ບໍ່ຈິງຈັງມາກ່ອນ ກໍກາຍເປັນຄົນທີ່ອ່ອນໂຍນເປັນພິເສດ ແລະ ມີຄວາມຈິງໃຈໃນທັນທີທັນໃດ; ການປາກົດຂອງຄວາມຈິງໃຈຂອງເຈົ້າເຮັດໃຫ້ຜູ້ຄົນໜາວສັ່ນເຖິງກະດູກ. ບໍ່ວ່າຫຍັງກໍຕາມ, ພວກເຈົ້າທຸກຄົນມີຫົວໃຈທີ່ “ສັດຊື່” ແລະ ພວກເຈົ້າໄດ້ເປີດໃຈກັບເຮົາ ເຖິງຄວາມລັບທີ່ຢູ່ໃນຫົວໃຈຂອງພວກເຈົ້າ ໂດຍບໍ່ໄດ້ເຊື່ອງຄວາມລັບຫຍັງໄວ້, ບໍ່ວ່າຈະເປັນການກ່າວໂທດ, ການຫຼອກລວງ ຫຼື ການອຸທິດຕົນ. ໂດຍລວມແລ້ວ ພວກເຈົ້າໄດ້ “ສາລະພາບ” ຕໍ່ເຮົາຈາກສ່ວນເລິກທີ່ສຸດຂອງການເປັນຢູ່ຂອງພວກເຈົ້າ ແບບກົງໄປກົງມາກ່ຽວກັບສິ່ງທີ່ສໍາຄັນ. ແນ່ນອນ, ເຮົາບໍ່ເຄີຍຫຼີກເວັ້ນສິ່ງດັ່ງກ່າວເພາະພວກມັນໄດ້ກາຍມາເປັນເລື່ອງທໍາມະດາສໍາລັບເຮົາ. ພວກເຈົ້າແມ່ນຍອມລົງສູ່ທະເລໄຟເພື່ອຈຸດໝາຍປາຍທາງຂອງພວກເຈົ້າ ແຕ່ບໍ່ຍອມສູນເສຍເສັ້ນຜົມແມ່ນແຕ່ເສັ້ນດຽວເພື່ອຮັບເອົາການເຫັນດີຂອງພຣະເຈົ້າ. ມັນບໍ່ແມ່ນວ່າເຮົາແຂງກະດ້າງກັບພວກເຈົ້າຫຼາຍເກີນໄປ; ມັນເປັນຍ້ອນວ່າຫົວໃຈແຫ່ງການອຸທິດຕົນຂອງພວກເຈົ້ານັ້ນບໍ່ພຽງພໍຫຼາຍເກີນໄປທີ່ຈະຜະເຊີນກັບທຸກສິ່ງທຸກຢ່າງທີ່ເຮົາກະທໍາ. ພວກເຈົ້າອາດບໍ່ເຂົ້າໃຈເຖິງສິ່ງທີ່ເຮົາເວົ້າ ສະນັ້ນ ເຮົາຂໍອະທິບາຍແບບງ່າຍໆໃຫ້ພວກເຈົ້າເຂົ້າໃຈ ນັ້ນກໍຄື ສິ່ງທີ່ພວກເຈົ້າຕ້ອງການບໍ່ແມ່ນຄວາມຈິງ ແລະ ຊີວິດ; ມັນບໍ່ແມ່ນຫຼັກການແຫ່ງການປະພຶດຕົວຂອງພວກເຈົ້າ ແລະ ມັນບໍ່ແມ່ນພາລະກິດທີ່ແສນເຈັບປວດຂອງເຮົາຢ່າງແນ່ນອນ. ແຕ່ສິ່ງທີ່ພວກເຈົ້າຕ້ອງການແມ່ນທຸກສິ່ງທຸກຢ່າງທີ່ພວກເຈົ້າມີໃນເນື້ອໜັງ ນັ້ນກໍຄື ຄວາມຮັ່ງມີ, ຖານະ, ຄອບຄົວ, ການແຕ່ງດອງ ແລະ ອື່ນໆ. ພວກເຈົ້າບໍ່ພິຈາລະນາເຖິງພຣະທໍາ ແລະ ພາລະກິດຂອງເຮົາຢ່າງແທ້ຈິງ, ສະນັ້ນ ເຮົາຈຶ່ງສາມາດສະຫຼຸບຄວາມເຊື່ອຂອງພວກເຈົ້າເປັນຄໍາດຽວວ່າຄວາມບໍ່ຈິງຈັງ. ພວກເຈົ້າຈະເຮັດທຸກສິ່ງເພື່ອບັນລຸສິ່ງຕ່າງໆທີ່ພວກເຈົ້າອຸທິດຕົວໃຫ້ຢ່າງເຕັມທີ່, ແຕ່ເຮົາຄົ້ນພົບວ່າພວກເຈົ້າບໍ່ເອົາໃຈໃສ່ໃນທຸກຢ່າງເພື່ອເຫັນແກ່ຄວາມເຊື່ອຂອງພວກເຈົ້າທີ່ມີຕໍ່ພຣະເຈົ້າ. ກົງກັນຂ້າມ, ພວກເຈົ້າຊື່ສັດພໍປະມານ ແລະ ກະຕືລືລົ້ນພໍປະມານ. ນັ້ນຄືເຫດຜົນທີ່ເຮົາເວົ້າວ່າ ຄົນທີ່ຂາດຫົວໃຈທີ່

ຈິງໃຈທີ່ສຸດກໍຄືຄົນທີ່ລົ້ມເຫຼວໃນຄວາມເຊື່ອຕໍ່ພຣະເຈົ້າ. ໃຫ້ຄິດຢ່າງຖີ່ຖ້ວນວ່າ ມີຄວາມລົ້ມເຫຼວທ່າມກາງພວກເຈົ້າຫຼາຍບໍ?

ພວກເຈົ້າຄວນຮູ້ວ່າ ຄວາມສຳເລັດໃນການເຊື່ອພຣະເຈົ້ານັ້ນ ແມ່ນສຳເລັດໂດຍຈາກການກະທຳຂອງຜູ້ຄົນເອງ; ເມື່ອຜູ້ຄົນບໍ່ປະສົບຜົນສຳເລັດ ແຕ່ກັບລົ້ມເຫຼວ, ນັ້ນກໍຍ້ອນການກະທຳຂອງພວກເຂົາເອງ, ບໍ່ແມ່ນຜົນມາຈາກປັດໄຈໃດໆ. ເຮົາເຊື່ອວ່າ ພວກເຈົ້າຕ້ອງເຮັດທຸກສິ່ງທຸກຢ່າງເພື່ອເຮັດໃຫ້ບາງສິ່ງສຳເລັດ ເຖິງແມ່ນວ່າ ສິ່ງນັ້ນຈະຫຍຸ້ງຍາກກວ່າ ແລະ ທົນທຸກທໍລະມານຫຼາຍກວ່າການເຊື່ອໃນພຣະເຈົ້າ ແລະ ພວກເຈົ້າກໍຈະເຮັດກັບມັນຢ່າງຈິງຈັງ. ຍິ່ງໄປກວ່ານັ້ນ ພວກເຈົ້າກໍຈະບໍ່ຢາກທົນກັບຂໍ້ຜິດພາດໃດໆເລີຍ; ສິ່ງເຫຼົ່ານີ້ແມ່ນຄວາມພະຍາຍາມຢ່າງບໍ່ທໍ້ຖອຍ ທີ່ພວກເຈົ້າທຸກຄົນໄດ້ນຳເຂົ້າສູ່ຊີວິດຂອງພວກເຈົ້າເອງ. ນອກຈາກນັ້ນ ພວກເຈົ້າຍັງສາມາດຫຼອກລວງເຮົາທາງຝ່າຍເນື້ອໜັງ ແຕ່ບໍ່ສາມາດຫຼອກລວງຄົນໃນຄອບຄົວຂອງພວກເຈົ້າເອງ. ນີ້ແມ່ນການປະພຶດທີ່ບໍ່ປ່ຽນແປງຂອງພວກເຈົ້າ ແລະ ຫຼັກການທີ່ພວກເຈົ້ານຳໄປໃຊ້ໃນຊີວິດຂອງພວກເຈົ້າ. ພວກເຈົ້າບໍ່ໄດ້ສ້າງພາບຈອມປອມເພື່ອຫຼອກລວງເຮົາບໍ ໂດຍເຫັນແກ່ຈຸດໝາຍປາຍທາງຂອງພວກເຈົ້າ ແລະ ເພື່ອຈະໄດ້ມີຈຸດໝາຍປາຍທາງທີ່ສວຍງາມ ແລະ ຢ່າງມີຄວາມສຸກ? ເຮົາຮູ້ວ່າ ການອຸທິດຕົນຂອງພວກເຈົ້າເປັນສິ່ງຊົ່ວຄາວ ແລະ ເຊັ່ນດຽວກັນກັບຄວາມຈິງໃຈຂອງພວກເຈົ້າ; ຄວາມທະເຍີທະຍານຂອງພວກເຈົ້າ ແລະ ລາຄາທີ່ພວກເຈົ້າຈ່າຍນັ້ນແມ່ນພຽງແຕ່ເພື່ອປັດຈຸບັນ ແລະ ບໍ່ແມ່ນສຳລັບອະນາຄົດບໍ່ແມ່ນບໍ? ພວກເຈົ້າພຽງແຕ່ຕ້ອງການໃຊ້ຄວາມພະຍາຍາມຄັ້ງສຸດທ້າຍເພື່ອຮັກສາຈຸດໝາຍປາຍທາງທີ່ສວຍງາມ. ເປົ້າໝາຍຂອງພວກເຈົ້າກໍເປັນພຽງການຄ້າຂາຍເທົ່ານັ້ນ; ມັນບໍ່ແມ່ນຍ້ອນພວກເຈົ້າເປັນໜີ້ກັບຄວາມຈິງ ແລະ ໂດຍສະເພາະແລ້ວ ມັນບໍ່ແມ່ນການຕອບແທນເຮົາສຳລັບລາຄາທີ່ເຮົາໄດ້ຈ່າຍ. ສະຫຼຸບກໍຄືພວກເຈົ້າພຽງແຕ່ເຕັມໃຈທີ່ຈະໃຊ້ຄວາມສະຫຼາດຂອງພວກເຈົ້າ, ແຕ່ພວກເຈົ້າບໍ່ເຕັມໃຈທີ່ຈະຕໍ່ສູ້ເພື່ອສິ່ງນັ້ນ. ນີ້ບໍ່ແມ່ນຄວາມປາຖະໜາທີ່ແທ້ຈິງຂອງພວກເຈົ້າບໍ? ພວກເຈົ້າຕ້ອງບໍ່ປິດບັງຕົວພວກເຈົ້າເອງ ແລະ ຍິ່ງໄປກວ່ານັ້ນ ຕ້ອງບໍ່ຄິດໜັກເກີນໄປກ່ຽວກັບຈຸດໝາຍປາຍທາງຂອງພວກເຈົ້າ ຈົນເຖິງຈຸດທີ່ວ່າພວກເຈົ້າບໍ່ສາມາດກິນ ແລະ ນອນຫຼັບໄດ້. ເພາະວ່າ ຄວາມຈິງແລ້ວຈຸດໝາຍປາຍທາງຂອງພວກເຈົ້າແມ່ນຈະຖືກກຳນົດໃນເວລາສຸດທ້າຍຢູ່ດີບໍ່ແມ່ນບໍ? ພວກເຈົ້າຄວນປະຕິບັດໜ້າທີ່ຂອງພວກເຈົ້າເອງດ້ວຍຄວາມສາມາດ ແລະ ດ້ວຍຫົວໃຈທີ່ເປີດເຜີຍ, ຊື່ສັດ ແລະ ເຕັມໃຈເຮັດທຸກຢ່າງ. ດັ່ງທີ່ພວກເຈົ້າໄດ້ເວົ້າ ເມື່ອມື້ນັ້ນມາເຖິງ ພຣະເຈົ້າຈະບໍ່ລະເລີຍກັບໃຜກໍຕາມທີ່ໄດ້ທົນທຸກ ຫຼື ເສຍສະຫຼະເພື່ອພຣະອົງ. ຄວາມເຊື່ອໝັ້ນແບບນີ້ແມ່ນສົມຄວນແກ່ການຍຶດໝັ້ນ ແລະ ພວກເຈົ້າບໍ່ຄວນລືມມັນຈັກເທື່ອ. ດ້ວຍວິທີນີ້ເທົ່ານັ້ນ ເຮົາຈຶ່ງຈະສະບາຍໃຈກ່ຽວກັບພວກເຈົ້າ. ບໍ່ດັ່ງນັ້ນ ເຮົາຈະບໍ່ສະບາຍໃຈກ່ຽວກັບພວກເຈົ້າ ແລະ ພວກເຈົ້າກໍຈະເປັນສິ່ງທີ່ເຮົາເບື່ອໜ່າຍຕະຫຼອດໄປ. ຖ້າພວກເຈົ້າທຸກຄົນສາມາດປະຕິບັດຕາມຄວາມສຳນຶກຂອງພວກເຈົ້າ ແລະ ມອບທຸກສິ່ງທຸກຢ່າງທີ່ພວກເຈົ້າມີໃຫ້ກັບເຮົາ, ທຸ້ມເທຄວາມພະຍາຍາມໃຫ້ກັບພາລະກິດຂອງເຮົາ ແລະ ອຸທິດທັງຊີວິດເພື່ອພາລະກິດຂ່າວປະເສີດຂອງເຮົາ, ຖ້າພວກເຈົ້າເຮັດໄດ້ແບບນັ້ນ ແລ້ວຫົວໃຈຂອງເຮົາຈະບໍ່ໂດດເຕັ້ນດ້ວຍຄວາມປິຕິຍິນດີໃຫ້

ກັບພວກເຈົ້າຢູ່ຕະຫຼອດເວລາບໍ? ດ້ວຍວິທີນີ້, ເຮົາຈະສາມາດສະບາຍໃຈກັບພວກເຈົ້າໄດ້ຢ່າງສິ້ນເຊີງ, ບໍ່ແມ່ນບໍ? ມັນເປັນຕາອັບອາຍເພາະສິ່ງທີ່ພວກເຈົ້າສາມາດເຮັດໄດ້ກໍມີພຽງແຕ່ສ່ວນນ້ອຍໆທີ່ເປັນຕາສົມເພດຈາກສິ່ງທີ່ເຮົາຄາດຫວັງ. ໃນກໍລະນີນີ້, ພວກເຈົ້າຍັງຈະໜ້າດ້ານສະແຫວງຫາຈາກເຮົາໃນສິ່ງທີ່ພວກເຈົ້າຄາດຫວັງໄດ້ແນວໃດ?

ຈຸດໝາຍປາຍທາງຂອງພວກເຈົ້າ ແລະ ໂຊກຊະຕາຂອງພວກເຈົ້າສຳຄັນກັບພວກເຈົ້າຫຼາຍ ນັ້ນກໍຄື ມັນໜ້າກັງວົນທີ່ສຸດ. ພວກເຈົ້າເຊື່ອວ່າ ຖ້າພວກເຈົ້າບໍ່ໄດ້ເຮັດສິ່ງຕ່າງໆດ້ວຍຄວາມລະມັດລະວັງ, ມັນກໍຈະເທົ່າກັບວ່າ ພວກເຈົ້າຂາດຈຸດໝາຍປາຍທາງ ແລະ ພວກເຈົ້າກໍໄດ້ທຳລາຍຄວາມເຊື່ອຂອງຕົນເອງ. ແຕ່ພວກເຈົ້າເຄີຍຄິດຢູ່ບໍວ່າ ຖ້າຄົນໜຶ່ງພະຍາຍາມເສຍສະຫຼະ ເພື່ອພຽງເຫັນແກ່ຈຸດໝາຍປາຍທາງຂອງຕົນ, ຄວາມພະຍາຍາມຂອງເຂົາແມ່ນຈະບໍ່ເກີດຜົນປະໂຫຍດຫຍັງ? ຄວາມພະຍາຍາມດັ່ງກ່າວແມ່ນບໍ່ເປັນຈິງ ນັ້ນກໍຄື ພວກມັນຈອມປອມ ແລະ ຫຼອກລວງ. ຖ້າເປັນແນວນັ້ນ ຄົນທີ່ປະຕິບັດພາລະກິດເພື່ອຈຸດໝາຍປາຍທາງຂອງພວກເຂົາກໍຈະໄດ້ຮັບຄວາມພ່າຍແພ້ຢ່າງແນ່ນອນ ຍ້ອນວ່າ ຄວາມລົ້ມເຫຼວໃນຄວາມເຊື່ອຂອງຜູ້ຄົນທີ່ມີຕໍ່ພຣະເຈົ້າເກີດຂຶ້ນຍ້ອນການຫຼອກລວງ. ເຮົາໄດ້ເວົ້າກ່ອນໜ້ານີ້ແລ້ວວ່າ ເຮົາບໍ່ມັກທີ່ຜູ້ຄົນມາປະຈົບປະແຈງ ຫຼື ລູບແຂ່ງເລຍຂາ ຫຼື ປະຕິບັດຕໍ່ເຮົາດ້ວຍຄວາມຕື່ນເຕັ້ນດີໃຈຊື່ໆ. ເຮົາມັກຄົນທີ່ຊື່ສັດເພື່ອຕໍ່ສູ້ກັບຄວາມຈິງ ແລະ ຄວາມຄາດຫວັງຂອງເຮົາ. ຍິ່ງໄປກວ່ານັ້ນ ເຮົາມັກເວລາທີ່ຄົນສາມາດສະແດງຄວາມລະອຽດອ່ອນທີ່ສຸດ ແລະ ຄຳນຶງເຖິງຫົວໃຈຂອງເຮົາ ແລະ ຍິ່ງໄປກວ່ານັ້ນກໍຄື ເຮົາມັກເວລາທີ່ພວກເຂົາສາມາດເສຍສະຫຼະທຸກສິ່ງທຸກຢ່າງເພື່ອເຫັນແກ່ເຮົາ. ມີພຽງແຕ່ວິທີນີ້ເທົ່ານັ້ນ ເຮົາຈຶ່ງຈະສະບາຍໃຈ. ໃນປັດຈຸບັນນີ້ ມີສິ່ງຕ່າງໆກ່ຽວກັບພວກເຈົ້າທີ່ເຮົາບໍ່ມັກຫຼາຍສໍ່າໃດ? ມີສິ່ງຕ່າງໆກ່ຽວກັບພວກເຈົ້າທີ່ເຮົາມັກຫຼາຍສໍ່າໃດ? ມັນເປັນໄປໄດ້ບໍວ່າບໍ່ມີຜູ້ໃດເລີຍໃນບັນດາພວກເຈົ້າທີ່ສຳນຶກເຖິງການສຳແດງອອກເຖິງຄວາມໜ້າລັງກຽດຕ່າງໆທີ່ເຈົ້າໄດ້ສະແດງອອກມາເພື່ອເຫັນແກ່ຈຸດໝາຍປາຍທາງຂອງພວກເຈົ້າ?

ໃນຫົວໃຈຂອງເຮົາ, ເຮົາບໍ່ປາຖະໜາທີ່ຈະທຳລາຍຫົວໃຈຂອງຜູ້ຄົນທີ່ເປັນບວກ ແລະ ໄດ້ຮັບແຮງຈູງໃຈ, ໂດຍສະເພາະແລ້ວ ເຮົາບໍ່ປາຖະໜາທີ່ຈະເຮັດໃຫ້ຜູ້ຄົນທີ່ປະຕິບັດໜ້າທີ່ຂອງພວກເຂົາດ້ວຍຄວາມຊື່ສັດນັ້ນໝົດກຳລັງໃຈ; ຢ່າງໃດກໍຕາມ ເຮົາຕ້ອງເຕືອນພວກເຈົ້າແຕ່ລະຄົນໄວ້ກ່ອນກ່ຽວກັບຄວາມບົກຜ່ອງຂອງພວກເຈົ້າ ແລະ ຈິດວິນຍານສົກກະປົກທີ່ຢູ່ໃນສ່ວນເລິກຂອງຫົວໃຈຂອງພວກເຈົ້າ. ຈຸດປະສົງໃນການເຮັດແບບນີ້ກໍຫວັງວ່າ ພວກເຈົ້າຈະສາມາດຖວາຍຫົວໃຈທີ່ແທ້ຈິງເພື່ອຜະເຊີນກັບພຣະທຳຂອງເຮົາ ເພາະວ່າ ສິ່ງທີ່ເຮົາກຽດຊັງທີ່ສຸດກໍຄືການຫຼອກລວງຂອງຜູ້ຄົນ. ເຮົາພຽງແຕ່ຫວັງວ່າ ໃນພາລະກິດຂັ້ນຕອນສຸດທ້າຍຂອງເຮົານັ້ນ ພວກເຈົ້າຈະສາມາດປະຕິບັດໄດ້ຢ່າງໂດດເດັ່ນ, ອຸທິດຕົນຢ່າງເຕັມທີ່ ແລະ ບໍ່ເປັນຄົນທີ່ບໍ່ຈິງໃຈອີກຕໍ່ໄປ. ແນ່ນອນ ເຮົາຍັງຫວັງໃຫ້ພວກເຈົ້າທຸກຄົນມີຈຸດໝາຍປາຍທາງທີ່ດີ. ຢ່າງໃດກໍຕາມ ເຮົາຍັງມີເງື່ອນໄຂຂອງເຮົາ ເຊິ່ງນັ້ນກໍຄື ການໃຫ້ພວກເຈົ້າຕັດສິນໃຈຢ່າງດີທີ່ສຸດທີ່ຈະຖວາຍການອຸທິດຕົນຄັ້ງດຽວ ແລະ ຄັ້ງສຸດທ້າຍ. ຖ້າບາງຄົນບໍ່ມີການອຸທິດໃນຄັ້ງນີ້, ຄົນນັ້ນກໍຈະເປັນຊັບສົມບັດຂອງຊາຕານຢ່າງແນ່ນອນ ແລະ ເຮົາກໍຈະບໍ່ສືບຕໍ່ນຳ

ໃຊ້ເຂົາ. ເຮົາຈະສົ່ງເຂົາກັບເຮືອນເພື່ອໃຫ້ພໍ່ແມ່ຂອງເຂົາດູແລ. ພາລະກິດຂອງເຮົາເປັນປະໂຫຍດໃຫ້ກັບພວກເຈົ້າຫຼາຍ; ສິ່ງທີ່ເຮົາຫວັງໄດ້ຮັບຈາກພວກເຈົ້າກໍຄືຫົວໃຈທີ່ຊື່ສັດ ແລະ ມີຄວາມປາຖະໜາສູງ, ແຕ່ຈົນຮອດປັດຈຸບັນນີ້ ມືຂອງເຮົາກໍຍັງວ່າງເປົ່າເໝືອນເດີມ. ໃຫ້ລອງຄິດກ່ຽວກັບສິ່ງນີ້ເບິ່ງ: ຖ້າມື້ໜຶ່ງ ເຮົາຍັງຄົງເສຍໃຈເໜືອຄຳບັນຍາຍແບບນີ້ ທ່າທີຂອງເຮົາທີ່ມີຕໍ່ພວກເຈົ້າຈະເປັນແນວໃດ? ເຮົາຈະຍັງເປັນມິດຢູ່ບໍ່? ຫົວໃຈຂອງເຮົາຈະມີສັນຕິສຸກຢູ່ບໍ? ພວກເຈົ້າເຂົ້າໃຈເຖິງຄວາມຮູ້ສຶກຂອງຄົນທີ່ປູກເຂົ້າຢ່າງພາກພຽນ ແຕ່ບໍ່ໄດ້ເກັບກ່ຽວເມັດເຂົ້າແມ່ນແຕ່ເມັດດຽວບໍ່? ພວກເຈົ້າເຂົ້າໃຈບໍ່ວ່າ ຄວາມເຈັບປວດຂອງບາງຄົນທີ່ຖືກຕີຢ່າງໜັກເປັນແນວໃດ? ພວກເຈົ້າສາມາດຊີມລົດຊາດແຫ່ງຄວາມເຈັບປວດຂອງຄົນທີ່ເຕັມໄປດ້ວຍຄວາມຫວັງ ຜູ້ເຊິ່ງຕ້ອງຈາກບາງຄົນໄປບົນເງື່ອນໄຂທີ່ບໍ່ຈົບງາມບໍ? ພວກເຈົ້າເຄີຍເຫັນຄວາມໂກດຮ້າຍຂອງຄົນທີ່ຖືກເຮັດໃຫ້ໃຈຮ້າຍບໍ? ພວກເຈົ້າສາມາດຮູ້ຈັກເຖິງຄວາມຮູ້ສຶກຮີບດ່ວນໃນການຕ້ອງການແກ້ແຄ້ນຂອງຄົນທີ່ຖືກປະຕິບັດນຳດ້ວຍຄວາມໂຫດຮ້າຍ ແລະ ຫຼອກລວງບໍ? ຖ້າພວກເຈົ້າເຂົ້າໃຈເຖິງຄວາມຄິດຂອງຄົນເຫຼົ່ານີ້, ເຮົາຄິດວ່າ ມັນກໍບໍ່ຍາກທີ່ພວກເຈົ້າຈະຈິນຕະນາການເຖິງທ່າທີຂອງພຣະເຈົ້າໃນເວລາແຫ່ງການແກ້ແຄ້ນຂອງພຣະອົງ. ສຸດທ້າຍນີ້ ເຮົາຫວັງໃຫ້ພວກເຈົ້າທຸກຄົນພະຍາຍາມຢ່າງຈິງຈັງເພື່ອເຫັນແກ່ຈຸດໝາຍປາຍທາງຂອງພວກເຈົ້າເອງ; ຢ່າງໃດກໍຕາມ, ພວກເຈົ້າບໍ່ຄວນນຳໃຊ້ວິທີທີ່ຫຼອກລວງເຂົ້າໃນຄວາມພະຍາຍາມຂອງພວກເຈົ້າ ຫຼື ບໍ່ດັ່ງນັ້ນ ໃນຫົວໃຈຂອງເຮົາກໍຍັງຄົງຜິດຫວັງກັບພວກເຈົ້າ. ຄວາມຜິດຫວັງດັ່ງກ່າວຈະນຳໄປສູ່ສິ່ງໃດ? ພວກເຈົ້າບໍ່ໄດ້ກຳລັງຫຼອກລວງຕົນເອງບໍ? ຄົນທີ່ຄິດເພື່ອຈຸດໝາຍປາຍທາງຂອງພວກເຂົາ ແຕ່ທຳລາຍມັນ ຄືຄົນຢ່າງໜ້ອຍແມ່ນບໍ່ສາມາດໄດ້ຮັບຄວາມລອດພົ້ນ. ເຖິງແມ່ນຜູ້ຄົນດັ່ງກ່າວຈະໂກດຮ້າຍພຽງໃດ, ແລ້ວມີໃຜຈະເຫັນອົກເຫັນໃຈພວກເຂົາ? ສະຫຼຸບແລ້ວ ເຮົາຍັງເຕັມໃຈທີ່ຈະປາຖະໜາໃຫ້ພວກເຈົ້າມີຈຸດໝາຍປາຍທາງທີ່ເໝາະສົມ ແລະ ດີ. ຍິ່ງໄປກວ່ານັ້ນ ເຮົາຫວັງວ່າ ຈະບໍ່ມີຜູ້ໃດໃນພວກເຈົ້າປະສົບກັບຄວາມພິນາດ.

# ພຣະໂອວາດສາມຂໍ້

ໃນຖານະເປັນຜູ້ທີ່ເຊື່ອໃນພຣະເຈົ້າ ເຈົ້າບໍ່ຄວນຈິງຮັກພັກດີຕໍ່ຜູ້ໃດນອກຈາກຕໍ່ພຣະອົງໃນທຸກສິ່ງ ແລະ ຕ້ອງສາມາດປະຕິບັດຕາມຄວາມປະສົງຂອງພຣະອົງໃນທຸກຢ່າງ. ເຖິງຢ່າງໃດກໍຕາມ ເຖິງແມ່ນວ່າທຸກຄົນເຂົ້າໃຈຂໍ້ຄວາມນີ້ ເພາະຄວາມຫຍຸ້ງຍາກຫຼາຍຢ່າງ, ເພາະຄວາມບໍ່ຮູ້, ຄວາມບໍ່ມີເຫດຜົນ ແລະ ຄວາມເສື່ອມຊາມຂອງເຂົາ, ຕົວຢ່າງ: ຄວາມຈິງເຫຼົ່ານີ້ເຊິ່ງຊັດເຈນ ແລະ ພື້ນຖານທີ່ສຸດໃນບັນດາຄວາມຈິງທັງໝົດ ບໍ່ໄດ້ຊັດເຈນໃນເຂົາຢ່າງສິ້ນເຊີງ ແລະ ດ້ວຍເຫດນັ້ນ ກ່ອນທີ່ຈຸດຈົບຂອງພວກເຂົາຈະຖືກກຳນົດໄວ້ໃນກ້ອນຫີນ, ເຮົາຄວນຈະບອກພວກເຈົ້າບາງຢ່າງກ່ອນເຊິ່ງມັນເປັນສິ່ງທີ່ສຳຄັນທີ່ສຸດຕໍ່ກັບພວກເຈົ້າ. ກ່ອນທີ່ເຮົາຈະສືບຕໍ່, ພວກເຈົ້າຄວນເຂົ້າໃຈສິ່ງນີ້ກ່ອນ: ພຣະທຳທີ່ເຮົາກ່າວແມ່ນຄວາມຈິງທີ່ມີຕໍ່ມະນຸດຊາດທັງປວງ; ພວກເຂົາບໍ່ໄດ້ຖືກນຳສະເໜີສະເພາະຕໍ່ກັບບຸກຄົນໃດຄົນໜຶ່ງ ຫຼື ຄົນບາງປະເພດເທົ່ານັ້ນ. ດັ່ງນັ້ນ ພວກເຈົ້າຄວນຕັ້ງໃຈທີ່ຈະເຂົ້າໃຈພຣະທຳຂອງເຮົາຈາກຈຸດຢືນຂອງຄວາມຈິງ ແລະ ຕ້ອງມີທ່າທີ່ມີຄວາມເອົາໃຈໃສ່ ແລະ ຄວາມຈິງໃຈຢ່າງໜັກແໜ້ນ; ບໍ່ເມີນເສີຍຕໍ່ພຣະທຳແມ່ນແຕ່ຄຳດຽວ ຫຼື ຄວາມຈິງທີ່ເຮົາເວົ້າ ແລະ ບໍ່ໃຫ້ຖືເບົາໃນພຣະທຳທັງໝົດຂອງເຮົາ. ໃນຊີວິດຂອງພວກເຈົ້າ ເຮົາເຫັນຫຼາຍຢ່າງທີ່ ພວກເຈົ້າກະທຳທີ່ບໍ່ກ່ຽວຂ້ອງກັບຄວາມຈິງ ແລະ ດ້ວຍເຫດນີ້ ເຮົາຈຶ່ງຂໍຮ້ອງພວກເຈົ້າໂດຍສະເພາະໃຫ້ພວກເຈົ້າເປັນຜູ້ຮັບໃຊ້ຄວາມຈິງ ແລະ ບໍ່ໃຫ້ເປັນທາດແຫ່ງຄວາມຊົ່ວຮ້າຍ ແລະ ຄວາມໜ້າລັງກຽດ ແລະ ບໍ່ໃຫ້ພວກເຈົ້າຢຽບຢໍ່າຄວາມຈິງ ຫຼື ເຮັດໃຫ້ມຸມໃດໜຶ່ງຂອງພຣະວິຫານຂອງພຣະເຈົ້າເປິເປື້ອນ. ນີ້ຄືຄຳພຣະໂອວາດຂອງເຮົາທີ່ມີຕໍ່ພວກເຈົ້າ. ບັດນີ້ ເຮົາຈະເລີ່ມເວົ້າກ່ຽວກັບຫົວຂໍ້ທີ່ມີຢູ່ໃນປັດຈຸບັນ.

ຢ່າງທຳອິດ, ພວກເຈົ້າຄວນສະແຫວງຫາການຮອງຮັບຂອງພຣະເຈົ້າ ເພື່ອຜົນປະໂຫຍດຕໍ່ຊາຕາກຳຂອງພວກເຈົ້າ. ນັ້ນໝາຍຄວາມວ່າ ຍ້ອນພວກເຈົ້າຮັບຮູ້ວ່າພວກເຈົ້າເປັນສະມາຊິກໃນເຮືອນຂອງພຣະເຈົ້າ, ພວກເຈົ້າກໍຄວນເຮັດໃຫ້ຈິດໃຈຂອງພຣະເຈົ້າມີສັນຕິສຸກ ແລະ ເຮັດໃຫ້ພຣະອົງເພິ່ງພໍໃຈໃນທຸກສິ່ງທຸກຢ່າງ. ເວົ້າໄດ້ອີກວ່າ ເຈົ້າຕ້ອງມີຫຼັກການໃນການກະທຳຂອງເຈົ້າ ແລະ ສອດຄ່ອງກັບຄວາມຈິງທີ່ມີຢູ່ໃນການກະທຳນັ້ນ. ຖ້າສິ່ງດັ່ງກ່າວເກີນຄວາມສາມາດຂອງເຈົ້າ, ແລ້ວເຈົ້າກໍຈະຖືກກຽດຊັງ ແລະ ປະຕິເສດໂດຍພຣະເຈົ້າ ແລະ ຖືກດູຖູກໂດຍມະນຸດທຸກຄົນ. ຫຼັງຈາກທີ່ເຈົ້າຕົກຢູ່ໃນສະພາບການທີ່ມືດມົວດັ່ງກ່າວ, ແລ້ວເຈົ້າກໍຈະບໍ່ສາມາດຖືກນັບເຂົ້າຢູ່ໃນເຮືອນຂອງພຣະເຈົ້າ ເຊິ່ງໝາຍຄວາມວ່າເຈົ້າຈະບໍ່ຖືກຮັບເອົາໂດຍພຣະເຈົ້າແທ້ໆ.

ຢ່າງທີສອງ, ພວກເຈົ້າຄວນຮູ້ວ່າ ພຣະເຈົ້າມັກຄົນທີ່ຊື່ສັດ. ພຣະເຈົ້າມີແກ່ນແທ້ຂອງຄວາມຊື່ສັດ ແລະ ພຣະທຳຂອງພຣະອົງແມ່ນສາມາດເຊື່ອຖືໄດ້ຕະຫຼອດເວລາ; ນອກຈາກນັ້ນ ການກະທຳຂອງພຣະອົງບໍ່ມີຄວາມຜິດພາດ ແລະ ບໍ່ເປັນທີ່ໜ້າສົງໄສ, ເຊິ່ງເປັນເຫດຜົນທີ່ພຣະເຈົ້າມັກຄົນທີ່ຊື່ສັດຕໍ່ພຣະອົງ ຢ່າງແທ້ຈິງ. ຄວາມຊື່ສັດໝາຍເຖິງການມອບໃຈຂອງເຈົ້າໃຫ້ແກ່ພຣະເຈົ້າ, ການເປັນຈິງກັບພຣະເຈົ້າໃນທຸກສິ່ງ, ການເປີດໃຈກັບພຣະອົງໃນທຸກສິ່ງ, ການບໍ່ປິດບັງຂໍ້ແທ້ຈິງຈັກເທື່ອ, ການບໍ່

ພະຍາຍາມຫຼອກລວງຄົນທີ່ຢູ່ເທິງ ແລະ ຢູ່ລຸ່ມເຈົ້າ ແລະ ການບໍ່ເຮັດພຽງແຕ່ສິ່ງທີ່ເຮັດໃຫ້ພຣະເຈົ້າເພິ່ງພໍໃຈໃນຕົວເຈົ້າເທົ່ານັ້ນ. ເວົ້າໂດຍຫຍໍ້, ການມີຄວາມຊື່ສັດແມ່ນການມີການກະທຳ ແລະ ຄຳເວົ້າທີ່ບໍລິສຸດ ແລະ ການບໍ່ຫຼອກລວງທັງພຣະເຈົ້າ ແລະ ມະນຸດ. ສິ່ງທີ່ເຮົາເວົ້າແມ່ນງ່າຍຫຼາຍ ແຕ່ສຳລັບພວກເຈົ້າ ມັນເປັນສິ່ງທີ່ຍາກລຳບາກເຖິງສອງເທົ່າ. ຫຼາຍຄົນເລືອກທີ່ຈະຖືກລົງໂທດໃຫ້ຕົກນະຮົກແທນທີ່ຈະເວົ້າ ແລະ ປະຕິບັດຢ່າງຊື່ສັດ. ບໍ່ແປກໃຈເລີຍທີ່ເຮົາຈະມີວິທີການ ຈັດການແບບອື່ນທີ່ກຽມໄວ້ສຳລັບຄົນທີ່ບໍ່ຊື່ສັດ. ແນ່ນອນຢູ່ແລ້ວ ເຮົາເຂົ້າໃຈດີເລື່ອງຄວາມຫຍຸ້ງຍາກລຳບາກທີ່ພວກເຈົ້າພົບພໍ້ໃນການເປັນຄົນຊື່ສັດ. ເພາະພວກເຈົ້າທຸກຄົນສະຫຼາດ, ຊຳນິຊຳນານຫຼາຍໃນການປະເມີນຜູ້ຄົນດ້ວຍມາດຕະຖານອັນຕໍ່າໆຂອງພວກເຈົ້າເອງ, ສິ່ງນີ້ເຮັດໃຫ້ພາລະກິດຂອງເຮົາງ່າຍຂຶ້ນຫຼາຍ. ແລ້ວໃນເມື່ອພວກເຈົ້າແຕ່ລະຄົນຮັກສາຄວາມລັບຂອງພວກເຈົ້າໄວ້ກັບຕົວເອງ, ຖ້າເປັນເຊັ່ນນັ້ນ ເຮົາກໍຈະສົ່ງພວກເຈົ້າໄປສູ່ຄວາມພິນາດເທື່ອລະຄົນເພື່ອຮັບ "ການສັ່ງສອນ" ຈາກກອງໄຟ, ເພື່ອວ່າຫຼັງຈາກນັ້ນພວກເຈົ້າອາດຈະມີຄວາມມຸ່ງໝັ້ນຕໍ່ຄວາມເຊື່ອໃນພຣະທຳຂອງເຮົາ. ໃນທີ່ສຸດ ເຮົາຈະດຶງຄຳເວົ້າວ່າ "ພຣະເຈົ້າແມ່ນພຣະເຈົ້າທີ່ຊື່ສັດ" ອອກຈາກປາກຂອງພວກເຈົ້າ ແລ້ວຫຼັງຈາກນັ້ນ ພວກເຈົ້າຈະຕີເອິກຂອງພວກເຈົ້າ ແລະ ເວົ້າອອກມາດ້ວຍຄວາມໂສກເສົ້າເສຍໃຈວ່າ "ຈິດໃຈຂອງມະນຸດຈັ່ງແມ່ນບໍ່ຈິງໃຈ!" ສະພາບຈິດໃຈຂອງພວກເຈົ້າຈະເປັນຈັ່ງໃດໃນຕອນນີ້? ເຮົາຈິນຕະນາການວ່າ ເຈົ້າຈະບໍ່ອວດອົ່ງທະນົງຕົວເກີນໄປຄືດັ່ງທີ່ເຈົ້າເປັນໃນຕອນນີ້. ແຮງໄກທີ່ພວກເຈົ້າຈະເຮັດເປັນ "ຄົນເລິກເຊິ່ງ ແລະ ຍາກຈະເຂົ້າໃຈ" ຄືດັ່ງທີ່ເປັນໃນຕອນນີ້ເລີຍ. ບາງຄົນປະພຶດຕົນໃນຮູບແບບຮຽບຮ້ອຍ ແລະ ສຸພາບ, ພວກເຂົາຮັບເອົາຄວາມເຈັບປວດເພື່ອໃຫ້ເບິ່ງຄື "ມີມາລະຍາດທີ່ດີ" ແຕ່ພວກເຂົາພັດສະແດງແຂ້ວທີ່ມີພິດຂອງພວກເຂົາ ແລະ ແກວ່ງເລັບມືຂອງພວກເຂົາຕໍ່ໜ້າພຣະວິນຍານ. ພວກເຈົ້າຈະຮັບເອົາຄົນດັ່ງກ່າວລວມເຂົ້າກັບກຸ່ມຄົນທີ່ຊື່ສັດບໍ? ຖ້າເຈົ້າໜ້າຊື່ໃຈຄົດ, ເປັນຄົນທີ່ມີທັກສະ "ການພົວພັນລະຫວ່າງບຸກຄົນ", ແລ້ວເຮົາຂໍເວົ້າວ່າ ເຈົ້າເປັນຄົນທີ່ພະຍາຍາມຕໍ່ສູ້ກັບພຣະເຈົ້າຢ່າງແນ່ນອນ. ຖ້າຄຳເວົ້າຂອງເຈົ້າເຕັມໄປດ້ວຍຂໍ້ແກ້ຕົວ ແລະ ເຫດຜົນທີ່ບໍ່ມີຄຸນຄ່າ, ແລ້ວເຮົາຂໍເວົ້າວ່າ ເຈົ້າເປັນຄົນກຽດຊັງໃນການປະຕິບັດຕໍ່ຄວາມຈິງ. ຖ້າເຈົ້າມີຄວາມໝັ້ນໃຈຫຼາຍຈົນເຈົ້າລັງເລທີ່ຈະແບ່ງປັນ, ຖ້າເຈົ້າບໍ່ເຕັມໃຈທີ່ຈະເປີດເຜີຍຄວາມລັບໃນໃຈຂອງເຈົ້າ ເຊິ່ງເປັນຄວາມຫຍຸ້ງຍາກຂອງເຈົ້າຕໍ່ໜ້າຄົນອື່ນໃຫ້ສະແຫວງຫາຫົນທາງແຫ່ງແສງສະຫວ່າງ, ເຮົາຂໍເວົ້າວ່າ ເຈົ້າແມ່ນຄົນທີ່ຈະບໍ່ໄດ້ຮັບຄວາມລອດພົ້ນຢ່າງງ່າຍດາຍ ແລະ ເປັນຜູ້ທີ່ຈະບໍ່ພົ້ນອອກຈາກຄວາມມືດຢ່າງງ່າຍດາຍ. ຖ້າການສະແຫວງຫາຫົນທາງແຫ່ງຄວາມຈິງເຮັດໃຫ້ເຈົ້າມີຄວາມເພິ່ງພໍໃຈ, ແລ້ວເຈົ້າກໍແມ່ນຄົນທີ່ອາໄສຢູ່ໃນຄວາມສະຫວ່າງຕະຫຼອດເວລາ. ຖ້າເຈົ້າມີຄວາມສຸກໃນການເປັນຜູ້ຮັບໃຊ້ໃນເຮືອນຂອງພຣະເຈົ້າ, ໂດຍເຮັດວຽກຢ່າງດຸໝັ່ນ ແລະ ເອົາໃຈໃສ່ໃນທຸກເລື່ອງ, ເປັນຜູ້ໃຫ້ຕະຫຼອດ ແລະ ບໍ່ເຄີຍເປັນຜູ້ຮັບ, ເຮົາຂໍເວົ້າວ່າ ເຈົ້າແມ່ນໄພ່ພົນທີ່ຈົງຮັກພັກດີ ເພາະເຈົ້າບໍ່ໄດ້ສະແຫວງຫາສິ່ງຕອບແທນ ແລະ ເປັນພຽງຄົນທີ່ຊື່ສັດ. ຖ້າເຈົ້າເຕັມໃຈທີ່ຈະເປັນຄົນຈິງຈັງ, ຖ້າເຈົ້າເຕັມໃຈທີ່ຈະສະຫຼະຊີວິດ, ຖ້າເຈົ້າສາມາດເສຍສະຫຼະຊີວິດຂອງເຈົ້າໃຫ້ກັບພຣະເຈົ້າ ແລະ ຍຶດໝັ້ນເປັນພະຍານ, ຖ້າເຈົ້າຊື່ສັດເຖິງຂັ້ນທີ່ເຈົ້າຮູ້ແຕ່ເຮັດໃນສິ່ງທີ່

ພຣະເຈົ້າເພິ່ງພໍໃຈ ແລະ ບໍ່ໄດ້ຄຳນຶງເຖິງຕົວເອງ ຫຼື ຜົນປະໂຫຍດສ່ວນຕົວ, ແລ້ວເຮົາຂໍເວົ້າວ່າ ຄົນເຫຼົ່ານີ້ແມ່ນຄົນທີ່ຖືກຫຼໍ່ລ້ຽງຈິດໃຈດ້ວຍແສງສະຫວ່າງ ແລະ ເປັນຄົນທີ່ຈະມີຊີວິດຢູ່ໃນອານາຈັກຢ່າງນິລັນດອນ. ເຈົ້າຄວນຮູ້ວ່າ ເຈົ້າມີຄວາມເຊື່ອທີ່ແທ້ຈິງ ແລະ ມີຄວາມຈົງຮັກພັກດີທີ່ແທ້ຈິງພາຍໃນຕົວເຈົ້າ ຫຼື ບໍ່, ເຈົ້າມີປະຫວັດການທົນທຸກທໍລະມານເພື່ອພຣະເຈົ້າ ຫຼື ບໍ່ ແລະ ເຈົ້າເຊື່ອຟັງພຣະເຈົ້າທັງໝົດ ຫຼື ບໍ່. ຖ້າເຈົ້າຂາດສິ່ງເຫຼົ່ານີ້, ແລ້ວຍັງມີຄວາມບໍ່ເຊື່ອຟັງ, ການຫຼອກລວງ, ຄວາມໂລບມາກ ແລະ ຄວາມທຸກໃຈ. ເມື່ອຫົວໃຈຂອງເຈົ້າບໍ່ຊື່ສັດ, ເຈົ້າຈະບໍ່ໄດ້ຮັບການຍອມຮັບທີ່ດີຈາກພຣະເຈົ້າ ແລະ ຈະບໍ່ມີຊີວິດໃນແສງສະຫວ່າງຈັກເທື່ອ. ຊາຕາກຳຂອງບຸກຄົນຈະເປັນແນວໃດໃນຕອນສຸດທ້າຍນັ້ນແມ່ນຂຶ້ນຢູ່ກັບວ່າຄົນນັ້ນມີຫົວໃຈທີ່ຊື່ສັດ ແລະ ມີຫົວໃຈທີ່ບໍລິສຸດ ຫຼື ບໍ່ ແລະ ຄົນນັ້ນຍັງມີຈິດວິນຍານທີ່ບໍລິສຸດ ຫຼື ບໍ່. ຖ້າເຈົ້າເປັນຄົນທີ່ບໍ່ມີຄວາມຊື່ສັດຫຍັງເລີຍ, ເປັນຄົນທີ່ມີຈິດໃຈຊົ່ວຮ້າຍ ແລະ ເປັນຄົນທີ່ມີຈິດວິນຍານທີ່ບໍ່ສະອາດ, ແລ້ວແນ່ນອນ ໃນທີ່ສຸດເຈົ້າກໍ່ຈະຕົກຢູ່ບ່ອນທີ່ມະນຸດຖືກລົງໂທດ ດັ່ງທີ່ໄດ້ຂຽນໄວ້ໃນຊະຕາກຳຂອງເຈົ້າ. ຖ້າເຈົ້າອ້າງຕົນວ່າເປັນຄົນທີ່ຊື່ສັດຫຼາຍແຕ່ບໍ່ເຄີຍປະພຶດຕົນຕາມຄວາມເປັນຈິງ ຫຼື ເວົ້າຄວາມຈິງ, ແລ້ວເຈົ້າຍັງຈະລໍຖ້າພຣະເຈົ້າໃຫ້ພອນແກ່ເຈົ້າບໍ? ເຈົ້າຍັງຫວັງໃຫ້ພຣະເຈົ້າຖືວ່າ ເຈົ້າເປັນບຸກຄົນທີ່ໂປດປານໃນສາຍຕາຂອງພຣະອົງບໍ? ນີ້ບໍ່ແມ່ນວິທີຄິດທີ່ຜິດປົກກະຕິບໍ? ເຈົ້າຫຼອກລວງພຣະເຈົ້າໃນທຸກສິ່ງທຸກຢ່າງ, ແລ້ວເຮືອນຂອງພຣະເຈົ້າຈະສາມາດຮອງຮັບເອົາຄົນແບບເຈົ້າ ທີ່ມີມືບໍ່ສະອາດໄດ້ແນວໃດ?

ເລື່ອງທີສາມທີ່ເຮົາຢາກບອກພວກເຈົ້າແມ່ນສິ່ງນີ້: ໃນຊ່ວງເວລາທີ່ດຳລົງຊີວິດດ້ວຍຄວາມເຊື່ອຕໍ່ພຣະເຈົ້າ ທຸກຄົນໄດ້ເຮັດສິ່ງທີ່ຕໍ່ຕ້ານ ແລະ ຫຼອກລວງພຣະເຈົ້າ. ການກະທຳບໍ່ດີບາງຢ່າງກໍບໍ່ຈຳເປັນຕ້ອງບັນທຶກວ່າເປັນການກະທຳຜິດ ແຕ່ບາງຄັ້ງກໍໃຫ້ອະໄພບໍ່ໄດ້; ເນື່ອງຈາກວ່າ ການກະທຳຫຼາຍຢ່າງທີ່ຝ່າຝືນຕໍ່ພຣະດຳລັດປົກຄອງ ເຊິ່ງລ່ວງເກີນອຸປະນິໄສຂອງພຣະເຈົ້າ. ຫຼາຍຄົນທີ່ເປັນຫ່ວງກັບຊາຕາກຳຂອງພວກເຂົາເອງອາດຈະຖາມວ່າ ການກະທຳເຫຼົ່ານີ້ແມ່ນຫຍັງ. ເຈົ້າຄວນຮູ້ວ່າ ພວກເຈົ້າມີນິໄສອວດດີ ແລະ ຈອງຫອງໂດຍທຳມະຊາດ ແລະ ບໍ່ເຕັມໃຈຍອມຮັບເອົາຄວາມຈິງ. ຍ້ອນເຫດຜົນດັ່ງກ່າວນີ້, ເຮົາຈຳເປັນຕ້ອງບອກພວກເຈົ້າໃນຕອນນີ້ເທື່ອລະໜ້ອຍ ຫຼັງຈາກທີ່ພວກເຈົ້າໄດ້ໄຕ່ຕອງຕົນເອງ. ເຮົາແນະນຳໃຫ້ພວກເຈົ້າທຳຄວາມເຂົ້າໃຈກັບເນື້ອໃນຂອງພຣະດຳລັດປົກຄອງໃຫ້ດີຂຶ້ນກວ່າເກົ່າ ແລະ ພະຍາຍາມຮຽນຮູ້ອຸປະນິໄສຂອງພຣະເຈົ້າ. ຖ້າບໍ່ດັ່ງນັ້ນ ພວກເຈົ້າຈະບໍ່ສາມາດປິດປາກພວກເຈົ້າໄດ້, ລີ້ນຂອງເຈົ້າຈາກການເວົ້າໂອ້ອວດຢ່າງຕາມໃຈເກີນໄປ ແລະ ເຈົ້າຈະລ່ວງເກີນອຸປະນິໄສຂອງພຣະເຈົ້າໂດຍບໍ່ໄດ້ເຈດຕະນາ ແລະ ຕົກໄປຢູ່ໃນຄວາມມືດ, ສູນເສຍການສະຖິດຂອງພຣະວິນຍານບໍລິສຸດ ແລະ ຂາດແສງສະຫວ່າງ. ເພາະວ່າພວກເຈົ້າແມ່ນບໍ່ມີຫຼັກການໃນການກະທຳ, ເພາະເຈົ້າເຮັດ ແລະ ເວົ້າໃນສິ່ງທີ່ເຈົ້າບໍ່ຄວນ, ເຈົ້າຈະໄດ້ຮັບຜົນກຳຕາມສະໜອງທີ່ເໝາະສົມ. ເຈົ້າຄວນຮູ້ວ່າ ເຖິງແມ່ນວ່າເຈົ້າບໍ່ມີຫຼັກການໃນຄຳເວົ້າ ແລະ ການກະທຳ, ພຣະເຈົ້າມີຫຼັກການໃນສອງຢ່າງນີ້ຫຼາຍ. ເຫດຜົນທີ່ເຈົ້າໄດ້ຮັບຜົນກຳຕາມສະໜອງແມ່ນຍ້ອນວ່າເຈົ້າໄດ້ລ່ວງເກີນພຣະເຈົ້າ, ບໍ່ແມ່ນລ່ວງເກີນບຸກຄົນ. ໃນຊີວິດຂອງເຈົ້າ ຖ້າເຈົ້າໄດ້ກະທຳຜິດຫຼາຍຄັ້ງຕໍ່ອຸປະນິໄສຂອງພຣະເຈົ້າ, ແລ້ວເຈົ້າກໍຈະ

ກາຍເປັນລູກຂອງນະຮົກ. ສຳລັບມະນຸດແລ້ວ ມັນອາດຈະປະກົດວ່າເຈົ້າພຽງແຕ່ເຮັດສອງສາມຢ່າງທີ່ບໍ່ສອດຄ່ອງກັບຄວາມຈິງ ແລະ ບໍ່ມີຫຍັງຫຼາຍກວ່ານັ້ນ. ຢ່າງໃດກໍຕາມ ເຈົ້າຮູ້ຕົວຢູ່ບໍວ່າ ໃນສາຍຕາຂອງພຣະເຈົ້າ ເຈົ້າແມ່ນຄົນໜຶ່ງທີ່ບໍ່ມີເຄື່ອງບູຊາແທນຄວາມຜິດບາບໃຫ້ຖວາຍອີກແລ້ວ? ຍ້ອນເຈົ້າໄດ້ຝ່າຝືນພຣະດຳລັດປົກຄອງຂອງພຣະເຈົ້າຫຼາຍກວ່າໜຶ່ງຄັ້ງ ແລະ ຍິ່ງໄປກວ່ານັ້ນ ເຈົ້າກໍບໍ່ໄດ້ສະແດງທ່າທີຂອງການສຳນຶກຜິດ, ບໍ່ມີທາງເລືອກອື່ນສຳລັບເຈົ້ານອກຈາກການຕົກນະຮົກ ເຊິ່ງເປັນບ່ອນທີ່ພຣະເຈົ້າລົງໂທດມະນຸດ. ໃນຂະນະທີ່ຕິດຕາມພຣະເຈົ້າ ມີຄົນຈຳນວນໜ້ອຍໄດ້ສ້າງການກະທຳບາງຢ່າງທີ່ລະເມີດຫຼັກການ ແຕ່ພາຍຫຼັງຖືກຈັດການ ແລະ ໄດ້ຮັບການຊີ້ນຳ ພວກເຂົາກໍຄ່ອຍໆຄົ້ນພົບຄວາມເສື່ອມຊາມຂອງພວກເຂົາເອງ, ແລ້ວຫຼັງຈາກນັ້ນກໍໄດ້ເຂົ້າສູ່ເສັ້ນທາງແຫ່ງຄວາມຈິງທີ່ຖືກຕ້ອງ ແລະ ພວກເຂົາກໍສືບຕໍ່ຮັບການສຶກສາອົບຮົມເປັນຢ່າງດີຈົນຮອດປັດຈຸບັນ. ໃນຕອນສຸດທ້າຍ ກຸ່ມຄົນດັ່ງກ່າວແມ່ນຜູ້ທີ່ຈະຄົງເຫຼືອຢູ່. ແຕ່ເຮົາສະແຫວງຫາຄົນທີ່ຊື່ສັດ; ຖ້າເຈົ້າແມ່ນຄົນຊື່ສັດ ແລະ ເປັນຄົນທີ່ເຮັດຕາມຫຼັກການ ແລ້ວເຈົ້າກໍ່ສາມາດເປັນຜູ້ທີ່ໄດ້ຮັບຄວາມໄວ້ວາງໃຈຈາກພຣະເຈົ້າ. ຖ້າໃນການກະທຳຂອງເຈົ້າ, ເຈົ້າບໍ່ໄດ້ລ່ວງເກີນອຸປະນິໄສຂອງພຣະເຈົ້າ ແລະ ຫສະແຫວງຫາພຣະປະສົງຂອງພຣະເຈົ້າ ແລະ ມີຈິດໃຈເຄົາລົບບູຊາພຣະເຈົ້າ, ແລ້ວຄວາມເຊື່ອຂອງເຈົ້າກໍ່ໄດ້ມາດຕະຖານແລ້ວ. ຜູ້ໃດທີ່ບໍ່ເຄົາລົບບູຊາພຣະເຈົ້າ ແລະ ບໍ່ມີຈິດໃຈທີ່ຢຳເກງແມ່ນຈະລ່ວງເກີນພຣະດຳລັດປົກຄອງຂອງພຣະເຈົ້າຢ່າງຊັດເຈນ. ຫຼາຍຄົນຮັບໃຊ້ພຣະເຈົ້າດ້ວຍພະລັງຈາກຄວາມຮັກມັກຂອງພວກເຂົາ, ແຕ່ພັດບໍ່ມີຄວາມເຂົ້າໃຈກ່ຽວກັບພຣະດຳລັດປົກຄອງຂອງພຣະເຈົ້າ, ແຮງໄກທີ່ຈະມີຄວາມຮູ້ກ່ຽວກັບຄວາມໝາຍ ທີ່ລຶກລັບຂອງພຣະທຳຂອງພຣະອົງ. ແລ້ວສະນັ້ນ ດ້ວຍເຈດຕະນາທີ່ດີຂອງພວກເຂົາ, ພວກເຂົາກໍ່ມັກຈະຈົບລົງດ້ວຍການເຮັດສິ່ງຕ່າງໆທີ່ຂັດຂວາງການຄຸ້ມຄອງຂອງພຣະເຈົ້າ. ໃນກໍລະນີທີ່ຮ້າຍແຮງພວກເຂົາຈະຖືກໂຍນອອກ, ບໍ່ໃຫ້ມີໂອກາດໃນການຕິດຕາມພຣະອົງອີກ ແລະ ຖືກໂຍນລົງສູ່ນະຮົກເຊິ່ງຈະຢຸດຕິການພົວພັນທັງໝົດກັບເຮືອນຂອງພຣະອົງ. ຜູ້ຄົນເຫຼົ່ານີ້ເຮັດວຽກຢູ່ໃນເຮືອນຂອງພຣະເຈົ້າດ້ວຍພະລັງຈາກເຈດຕະນາດີຂອງພວກເຂົາຢ່າງບໍ່ຮູ້ ແລະ ສຸດທ້າຍກໍ່ສ້າງຄວາມໂກດເຄືອງໃຫ້ແກ່ອຸປະນິໄສຂອງພຣະເຈົ້າ. ຜູ້ຄົນຈະນຳເອົາວິທີການຮັບໃຊ້ເຈົ້າໜ້າທີ່ ແລະ ເຈົ້ານາຍຂອງພວກເຂົາມາໃຊ້ໃນເຮືອນຂອງພຣະເຈົ້າ ແລະ ພະຍາຍາມນຳໃຊ້ວິທີການເຫຼົ່ານັ້ນ ໂດຍຄິດຢ່າງໄຮ້ປະໂຫຍດວ່າວິທີການເຫຼົ່ານັ້ນຈະສາມາດນຳມາໃຊ້ຢູ່ບ່ອນນີ້ຢ່າງງ່າຍດາຍໂດຍທີ່ບໍ່ຕ້ອງອອກແຮງຫຍັງ. ພວກເຂົາບໍ່ເຄີຍຈິນຕະນາການເລີຍວ່າ ພຣະເຈົ້າບໍ່ໄດ້ມີອຸປະນິໄສຄືດັ່ງລູກແກະ ແຕ່ພັດແມ່ນອຸປະນິໄສຄືດັ່ງໂຕສິງ. ດັ່ງນັ້ນ ຜູ້ທີ່ພົວພັນກັບພຣະເຈົ້າເປັນຄັ້ງທຳອິດຈຶ່ງບໍ່ສາມາດສື່ສານກັບພຣະອົງໄດ້ ເພາະວ່າຫົວໃຈຂອງພຣະອົງບໍ່ຄືກັນກັບມະນຸດ. ພາຍຫຼັງທີ່ເຈົ້າໄດ້ເຂົ້າໃຈຄວາມຈິງເຫຼົ່ານີ້ເທົ່ານັ້ນ, ເຈົ້າຈຶ່ງຈະສາມາດສືບຕໍ່ມາຮູ້ຈັກກັບພຣະເຈົ້າໄດ້. ຄວາມຮູ້ນີ້ບໍ່ໄດ້ຖືກສ້າງຂຶ້ນໂດຍຄຳເວົ້າ ແລະ ຫຼັກຄຳສອນ, ແຕ່ສາມາດນຳໄປໃຊ້ເປັນຊັບສົມບັດເພື່ອໃຫ້ເຈົ້າເປັນທີ່ໝັ້ນໃຈຢ່າງໃກ້ຊິດກັບພຣະເຈົ້າ ແລະ ເປັນສິ່ງພິສູດວ່າພຣະອົງມີຄວາມຍິນດີ ໃນຕົວເຈົ້າ. ຖ້າເຈົ້າຂາດຄວາມເປັນຈິງກ່ຽວກັບຄວາມຮູ້ ແລະ ບໍ່ປະກອບມີຄວາມຈິງ, ແລ້ວການຮັບໃຊ້ດ້ວຍຄວາມຮັກຂອງເຈົ້າກໍສາມາດນຳເອົາຄວາມລັງກຽດ ແລະ

ຄວາມກຽດຊັງ ຈາກພຣະເຈົ້າໄດ້. ມາຮອດຕອນນີ້ ເຈົ້າຄວນຄິດອອກແລ້ວວ່າ ຄວາມເຊື່ອໃນພຣະເຈົ້າບໍ່ແມ່ນການຮຽນທິດສະດີເທົ່ານັ້ນ!

ເຖິງວ່າພຣະທຳທີ່ເຮົາໃຊ້ຕັກເຕືອນພວກເຈົ້າອາດຈະເປັນບົດຄວາມສັ້ນ, ທຸກສິ່ງທີ່ເຮົາໄດ້ອະທິບາຍມານີ້ແມ່ນສິ່ງທີ່ພວກເຈົ້າຍັງຂາດຫຼາຍທີ່ສຸດ. ເຈົ້າຄວນຮູ້ໄວ້ວ່າສິ່ງທີ່ເຮົາເວົ້າໃນປັດຈຸບັນແມ່ນເພື່ອປະໂຫຍດຂອງພາລະກິດສຸດທ້າຍຂອງເຮົາຕໍ່ມວນມະນຸດ ເຊິ່ງກໍເພື່ອປະໂຫຍດໃນການກຳນົດຈຸດຈົບຂອງມະນຸດ. ເຮົາບໍ່ປາດຖະໜາທີ່ຈະເຮັດພາລະກິດທີ່ບໍ່ມີປະໂຫຍດຫຍັງຫຼາຍໄປກວ່ານີ້ ແລະ ເຮົາບໍ່ປາດຖະໜາສືບຕໍ່ນຳພາມະນຸດຜູ້ທີ່ສິ້ນຫວັງ ເໝືອນດັ່ງໄມ້ເນົ່າ, ຢ່າວ່າແຕ່ສືບຕໍ່ນຳພາຜູ້ທີ່ມີເຈດຕະນາບໍ່ດີຢ່າງລັບໆເລີຍ. ບາງເທື່ອໃນມື້ໜຶ່ງ, ພວກເຈົ້າຈະເຂົ້າໃຈເຈດຕະນາທີ່ແທ້ຈິງ ທີ່ຢູ່ເບື້ອງຫຼັງຂອງພຣະທຳຂອງເຮົາ ແລະ ການປະກອບສ່ວນທີ່ເຮົາໄດ້ມີຕໍ່ມວນມະນຸດ. ບາງເທື່ອໃນມື້ໜຶ່ງ ພວກເຈົ້າຈະເຂົ້າໃຈຂໍ້ຄວາມທີ່ເຮັດໃຫ້ພວກເຈົ້າສາມາດກຳນົດຈຸດຈົບຂອງຕົນເອງໄດ້.

# ການເຮັດຜິດຈະນຳພາມະນຸດໄປສູ່ນະຮົກ

ເຮົາໄດ້ເຕືອນພວກເຈົ້າຫຼາຍຄັ້ງ ແລະ ໄດ້ປະທານຄວາມຈິງຫຼາຍຂໍ້ແກ່ພວກເຈົ້າເພື່ອເອົາຊະນະພວກເຈົ້າ. ໃນຕອນນີ້ ພວກເຈົ້າທຸກຄົນຮູ້ສຶກອຸດົມສົມບູນຫຼາຍຂຶ້ນກວ່າທີ່ເຈົ້າເປັນໃນອະດີດ, ເຂົ້າໃຈຫຼັກການຫຼາຍຂໍ້ກ່ຽວກັບວິທີທີ່ຄົນໆໜຶ່ງຄວນເປັນ ແລະ ເຈົ້າມີສາມັນສຳນຶກຫຼາຍດັ່ງທີ່ຄົນຊື່ສັດຄວນມີ. ນີ້ແມ່ນສິ່ງທີ່ພວກເຈົ້າໄດ້ຮັບເປັນເວລາຫຼາຍປີແລ້ວ. ທັງໝົດນີ້ຄືຜົນເກັບກ່ຽວທີ່ພວກເຈົ້າໄດ້ເກັບຕະຫຼອດຊ່ວງເວລາຫຼາຍປີ. ເຮົາບໍ່ໄດ້ປະຕິເສດຄວາມສຳເລັດຂອງພວກເຈົ້າ, ແຕ່ເຮົາຍັງຕ້ອງເວົ້າຢ່າງກົງໄປກົງມາວ່າເຮົາຍັງບໍ່ໄດ້ປະຕິເສດການບໍ່ເຊື່ອຟັງ ແລະ ການກະບົດທັງຫຼາຍທີ່ພວກເຈົ້າມີຕໍ່ເຮົາຕະຫຼອດເວລາຫຼາຍປີມານີ້, ຍ້ອນວ່າໃນທ່າມກາງພວກເຈົ້າແມ່ນບໍ່ມີນັກບຸນແມ່ນແຕ່ຄົນດຽວ. ພວກເຈົ້າແມ່ນຄົນທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ ໂດຍບໍ່ມີຂໍ້ຍົກເວັ້ນ; ພວກເຈົ້າເປັນສັດຕູຂອງພຣະຄຣິດ. ຈົນເຖິງປັດຈຸບັນ, ການເຮັດຜິດ ແລະ ການບໍ່ເຊື່ອຟັງຂອງພວກເຈົ້າແມ່ນນັບບໍ່ຖ້ວນ, ດ້ວຍເຫດນັ້ນ ມັນຈຶ່ງບໍ່ຄ່ອຍແປກ ທີ່ເຮົາໄດ້ເວົ້າຊໍ້າຕະຫຼອດເວລາຢູ່ຕໍ່ໜ້າພວກເຈົ້າ. ເຮົາບໍ່ຢາກດຳລົງຊີວິດແບບນີ້ກັບພວກເຈົ້າ, ແຕ່ເພື່ອເຫັນແກ່ອະນາຄົດຂອງພວກເຈົ້າ, ເພື່ອຈຸດໝາຍປາຍທາງຂອງພວກເຈົ້າ, ເຮົາຈຶ່ງຈະທວນຄືນສິ່ງທີ່ເຮົາໄດ້ເວົ້າອີກຄັ້ງໃນທີ່ນີ້. ເຮົາຫວັງວ່າ ພວກເຈົ້າຈະເຮັດຕາມໃຈເຮົາ ແລະ ຍິ່ງໄປກວ່ານັ້ນ ເຮົາຫວັງວ່າ ພວກເຈົ້າຈະສາມາດເຊື່ອຖືຍຄຳທຸກຂໍ້ຂອງເຮົາ ແລະ ເຂົ້າໃຈຄວາມໝາຍທີ່ເລິກເຊິ່ງໃນພຣະທຳຂອງເຮົາ. ຈົ່ງຢ່າສົງໄສກ່ຽວກັບສິ່ງທີ່ເຮົາເວົ້າ, ຢ່າພຽງແຕ່ຮັບເອົາພຣະທຳຂອງເຮົາຕາມທີ່ເຈົ້າປາຖະໜາ ແລະ ໂຍນພວກມັນຕາມອຳເພີໃຈ; ເຮົາເຫັນວ່ານີ້ຄືສິ່ງທີ່ຮັບບໍ່ໄດ້. ຈົ່ງຢ່າຕັດສິນພຣະທຳຂອງເຮົາ ແລະ ຢ່າວ່າແຕ່ການຖືເບົາຕໍ່ພຣະທຳເຫຼົ່ານັ້ນເລີຍ ຫຼື ເວົ້າວ່າເຮົາລໍ້ລວງພວກເຈົ້າຕະຫຼອດ ຫຼື ຮ້າຍໄປກວ່ານັ້ນ ແມ່ນການເວົ້າວ່າ ສິ່ງທີ່ເຮົາບອກພວກເຈົ້າແມ່ນບໍ່ມີຄວາມຖືກຕ້ອງ. ເຮົາເຫັນວ່າສິ່ງເຫຼົ່ານີ້ເປັນສິ່ງທີ່ຮັບບໍ່ໄດ້. ຍ້ອນພວກເຈົ້າປະຕິບັດຕໍ່ເຮົາ ແລະ ປະຕິບັດຕໍ່ສິ່ງທີ່ເຮົາເວົ້າດ້ວຍຄວາມສົງໄສແບບນັ້ນ, ບໍ່ເຄີຍເອົາພຣະທຳຂອງເຮົາ ແລະ ເມີນເສີຍຕໍ່ເຮົາ, ເຮົາຂໍບອກພວກເຈົ້າແຕ່ລະຄົນດ້ວຍຄວາມຈິງຈັງແທ້ໆ: ຢ່າເອົາສິ່ງທີ່ເຮົາເວົ້າໄປເຊື່ອມໂຍງກັບປັດຊະຍາ; ຢ່າເອົາສິ່ງທີ່ເຮົາເວົ້າໄປລວມກັນກັບຄຳຫຼອກລວງຂອງນັກຕົ້ມຕຸນ. ເຈົ້າແຮງບໍ່ຄວນໂຕ້ຕອບພຣະທຳຂອງເຮົາດ້ວຍການດູຖູກ. ບາງເທື່ອໃນອະນາຄົດອາດຈະບໍ່ມີໃຜສາມາດບອກພວກເຈົ້າໃນສິ່ງທີ່ເຮົາກຳລັງບອກພວກເຈົ້າຢູ່ ຫຼື ເວົ້າກັບພວກເຈົ້າດ້ວຍຄວາມກະລຸນາ ຫຼື ພາພວກເຈົ້າຍ່າງຜ່ານຈຸດເຫຼົ່ານີ້ດ້ວຍຄວາມອົດທົນເລີຍ. ພວກເຈົ້າຈະໃຊ້ມື້ເຫຼົ່ານັ້ນເພື່ອເອີ້ນເວລາທີ່ດີກັບຄືນມາ ຫຼື ໃນການຮ້ອງໄຫ້ສຽງດັງ ຫຼື ຄວນຄາງດ້ວຍຄວາມເຈັບປວດ ຫຼື ເຈົ້າຈະດຳລົງຊີວິດຜ່ານກາງຄືນທີ່ຄໍ່າມືດ ໂດຍທີ່ບໍ່ມີຄວາມຈິງ ຫຼື ຊີວິດແມ່ນແຕ່ໜ້ອຍດຽວ ຫຼື ພຽງແຕ່ລໍຖ້າຢ່າງໝົດຫວັງ ຫຼື ຢູ່ໃນຄວາມເສຍໃຈທີ່ຂົມຂື່ນຈົນພວກເຈົ້າສູນເສຍເຫດຜົນທັງໝົດ... ໂດຍແທ້ຈິງແລ້ວ ບໍ່ມີພວກເຈົ້າຄົນໃດທີ່ສາມາດຫຼີກເວັ້ນຈາກຄວາມເປັນໄປໄດ້ເຫຼົ່ານີ້. ເພາະບໍ່ມີຜູ້ໃດໃນບັນດາພວກເຈົ້າທີ່ຄອບຄອງບ່ອນນັ່ງທີ່ພວກເຈົ້າໃຊ້ນັ່ງເພື່ອນະມັດສະການພຣະເຈົ້າຢ່າງແທ້ຈິງ, ແຕ່ເຮັດໃຫ້ຕົນເອງຈົມຢູ່ໃນໂລກແຫ່ງຕັນຫາ

ແລະ ຄວາມຊົ່ວຮ້າຍ, ປະປົນຄວາມເຊື່ອຂອງພວກເຈົ້າ, ເຂົ້າໃສ່ຈິດວິນຍານ, ວິນຍານ ແລະ ຮ່າງກາຍຂອງພວກເຈົ້າ, ຫຼາຍໆສິ່ງທີ່ບໍ່ມີສ່ວນກ່ຽວຂ້ອງກັບຊີວິດ ແລະ ຄວາມຈິງ ແລະ ແທ້ຈິງແລ້ວ ແມ່ນການຕໍ່ຕ້ານສິ່ງເຫຼົ່ານັ້ນ. ສະນັ້ນ ສິ່ງທີ່ເຮົາຄາດຫວັງຈາກພວກເຈົ້າກໍຄືໃຫ້ພວກເຈົ້າສາມາດຖືກນຳມາສູ່ເສັ້ນທາງແຫ່ງແສງສະຫວ່າງ. ຄວາມຫວັງຢ່າງດຽວຂອງເຮົາກໍຄືພວກເຈົ້າສາມາດເບິ່ງແຍງຕົວເອງ, ສາມາດລ້ຽງດູຕົວເອງ ແລະ ບໍ່ເໜັ້ນໜັກຫຼາຍກັບຈຸດໝາຍປາຍທາງຂອງເຈົ້າເອງ ໃນຂະນະທີ່ເບິ່ງພຶດຕິກຳ ແລະ ການເຮັດຜິດຂອງຕົວດ້ວຍຄວາມບໍ່ສົນໃຈ.

ເປັນເວລາດົນນານ, ຜູ້ຄົນທີ່ເຊື່ອໃນພຣະເຈົ້າໄດ້ຄາດຫວັງຫາຈຸດໝາຍປາຍທາງທີ່ສວຍງາມຢ່າງຈິງໃຈ ແລະ ທຸກຄົນທີ່ເຊື່ອໃນພຣະເຈົ້າຫວັງວ່າໂຊກລາບທີ່ດີຈະມາເຖິງພວກເຂົາທັນທີ. ພວກເຂົາທຸກຄົນກໍຫວັງວ່າ ກ່ອນທີ່ພວກເຂົາຈະຮູ້ເຖິງສິ່ງນັ້ນ ພວກເຂົາຈະເຫັນຕົວເອງນັ່ງຢູ່ບ່ອນໜຶ່ງດ້ວຍຄວາມສະຫງົບສຸກ ຫຼື ອີກບ່ອນໜຶ່ງຢູ່ເທິງສະຫວັນ. ແຕ່ເຮົາຂໍເວົ້າວ່າ ຜູ້ຄົນເຫຼົ່ານີ້ພ້ອມກັບຄວາມຄິດທີ່ສວຍງາມຂອງພວກເຂົາ ແມ່ນບໍ່ເຄີຍຮູ້ຈັກວ່າ ພວກເຂົາມີຄຸນສົມບັດ ຫຼື ບໍ່ ໃນການໄດ້ຮັບໂຊກລາບດັ່ງກ່າວທີ່ຕົກລົງມາຈາກສະຫວັນ ຫຼື ແມ່ນແຕ່ນັ່ງຢູ່ໃນທີ່ນັ້ນ. ພວກເຈົ້າໃນປັດຈຸບັນ ແມ່ນມີຄວາມຮູ້ທີ່ດີກ່ຽວກັບຕົວເອງ ແຕ່ພວກເຈົ້າຍັງຫວັງທີ່ຈະໜີພົ້ນຈາກໄພພິບັດຂອງຍຸກສຸດທ້າຍ ແລະ ມືຂອງອົງຊົງລິດທານຸພາບສູງສຸດ ເມື່ອພຣະອົງລົງໂທດຜູ້ທີ່ຊົ່ວຮ້າຍ. ມັນເບິ່ງຄືວ່າ ການຝັນຫວານ ແລະ ການຕ້ອງການສິ່ງຕ່າງໆດັ່ງທີ່ພວກມັນເປັນແມ່ນລັກສະນະທົ່ວໄປຂອງທຸກຄົນທີ່ຊາຕານໄດ້ເຮັດໃຫ້ເສື່ອມຊາມ ແລະ ບໍ່ແມ່ນຄວາມອັດສະລິຍະຂອງບາງຄົນ. ເຖິງຢ່າງນັ້ນ ເຮົາກໍຍັງຕ້ອງການຢຸດຕິຄວາມປາດຖະໜາທີ່ເກີນຂອບເຂດຂອງພວກເຈົ້າ ພ້ອມທັງຄວາມກະຕືລືລົ້ນຂອງພວກເຈົ້າໃນການໄດ້ຮັບພອນ. ເນື່ອງຈາກການເຮັດຜິດຂອງພວກເຈົ້າແມ່ນມີຫຼາຍ ແລະ ຂໍ້ແທ້ຈິງກ່ຽວກັບຄວາມກະບົດຂອງພວກເຈົ້າກໍມີຫຼາຍເພີ່ມຂຶ້ນເລື້ອຍໆ ແລ້ວສິ່ງເຫຼົ່ານີ້ຈະເໝາະກັບແຜນການອັນສວຍງາມສຳລັບອະນາຄົດຂອງພວກເຈົ້າໄດ້ແນວໃດ? ຖ້າຫາກເຈົ້າຕ້ອງການເຮັດຜິດຕາມທີ່ເຈົ້າພໍໃຈໂດຍທີ່ບໍ່ມີຫຍັງດຶງເຈົ້າໄວ້ ແຕ່ກໍຍັງຕ້ອງການໃຫ້ຄວາມຝັນກາຍເປັນຈິງ, ແລ້ວເຮົາກໍຂໍສົ່ງເສີມໃຫ້ເຈົ້າສືບຕໍ່ຢູ່ໃນສະພາບທີ່ບໍ່ຮູ້ສຶກຕົວ ແລະ ບໍ່ໃຫ້ຕື່ນຂຶ້ນມາ ເພາະວ່າ ຄວາມຝັນຂອງເຈົ້າແມ່ນຄວາມຝັນທີ່ວ່າງເປົ່າ ແລະ ຢູ່ຕໍ່ໜ້າພຣະເຈົ້າຜູ້ຊອບທຳ, ພຣະອົງຈະບໍ່ມີຂໍ້ຍົກເວັ້ນສຳລັບເຈົ້າ. ຖ້າເຈົ້າພຽງແຕ່ຕ້ອງການໃຫ້ຄວາມຝັນກາຍເປັນຈິງ, ກໍຈົ່ງຢ່າຝັນ; ກົງກັນຂ້າມ ໃຫ້ພະເຊີນກັບຄວາມຈິງ ແລະ ຄວາມເປັນຈິງຕະຫຼອດໄປ. ນັ້ນແມ່ນວິທີດຽວທີ່ຈະຊ່ວຍໃຫ້ເຈົ້າສາມາດລອດພົ້ນໄດ້. ໃນເລື່ອງຮູບປະທຳ, ຂັ້ນຕອນຕ່າງໆໃນວິທີການນີ້ແມ່ນຫຍັງ?

ກ່ອນອື່ນ, ໃຫ້ພິຈາລະນາເບິ່ງການເຮັດຜິດທັງໝົດຂອງເຈົ້າ ແລະ ກວດສອບພຶດຕິກຳ ແລະ ຄວາມຄິດໃດໜຶ່ງທີ່ເຈົ້າມີເຊິ່ງບໍ່ສອດຄ່ອງກັບຄວາມຈິງ.

ນີ້ແມ່ນສິ່ງໜຶ່ງທີ່ພວກເຈົ້າສາມາດເຮັດໄດ້ຢ່າງງ່າຍດາຍ ແລະ ເຮົາເຊື່ອວ່າ ທຸກຄົນທີ່ສະຫຼາດກໍ່ສາມາດເຮັດສິ່ງນີ້ໄດ້. ເຖິງຢ່າງໃດກໍຕາມ, ຜູ້ຄົນເຫຼົ່ານັ້ນ ທີ່ບໍ່ເຄີຍຮູ້ຈັກຄວາມໝາຍຂອງການເຮັດຜິດ ແລະ ຄວາມຈິງ ແມ່ນຄົນທີ່ຖືກຍົກເວັ້ນ ຍ້ອນວ່າໂດຍພື້ນຖານແລ້ວ ພວກເຂົາບໍ່ແມ່ນຄົນທີ່ສະຫຼາດ. ເຮົາ

ກຳລັງເວົ້າເຖິງຜູ້ຄົນທີ່ພຣະເຈົ້າຮອງຮັບ, ຜູ້ທີ່ຊື່ສັດ, ບໍ່ໄດ້ຝ່າຝືນພຣະດຳລັດຢ່າງຮ້າຍແຮງ ແລະ ສາມາດແຍກແຍະການເຮັດຜິດຂອງພວກເຂົາໄດ້ຢ່າງງ່າຍດາຍ. ເຖິງແມ່ນວ່າ ນີ້ຈະແມ່ນສິ່ງທີ່ເຮົາຕ້ອງການຈາກພວກເຈົ້າ ແຕ່ມັນກໍບໍ່ໄດ້ແມ່ນສິ່ງດຽວເທົ່ານັ້ນທີ່ເຮົາຕ້ອງການຈາກພວກເຈົ້າ. ບໍ່ວ່າໃນຫຍັງກໍຕາມ, ເຮົາຫວັງວ່າ ພວກເຈົ້າຈະບໍ່ຫົວຂວັນລັບໆຕໍ່ຄວາມຕ້ອງການນີ້ ແລະ ຍິ່ງໄປກວ່ານັ້ນກໍຄື ເຈົ້າຈະບໍ່ດູຖູກມັນ ຫຼື ບໍ່ຖືເບົາກັບມັນ. ເຈົ້າຄວນປະຕິບັດກັບມັນດ້ວຍຄວາມຈິງຈັງ ແລະ ບໍ່ເມີນເສີຍຕໍ່ມັນ.

ຢ່າງທີສອງ, ສຳລັບການເຮັດຜິດ ແລະ ການບໍ່ເຊື່ອຟັງຂອງເຈົ້າແຕ່ລະຄົນ, ເຈົ້າຄວນຊອກຫາຄວາມຈິງທີ່ສອດຄ່ອງ ແລະ ຫຼັງຈາກນັ້ນກໍ່ນຳໃຊ້ຄວາມຈິງເຫຼົ່ານີ້ເພື່ອແກ້ໄຂພວກມັນ. ຫຼັງຈາກນັ້ນ, ໃຫ້ປ່ຽນການກະທຳທີ່ເຮັດຜິດ ແລະ ຄວາມຄິດທີ່ບໍ່ເຊື່ອຟັງຂອງເຈົ້າ ແລະ ເຮັດດ້ວຍການປະຕິບັດແຫ່ງຄວາມຈິງ.

ຢ່າງທີສາມ, ເຈົ້າຄວນເປັນຄົນທີ່ຊື່ສັດ, ບໍ່ແມ່ນຄົນທີ່ສະຫຼາດ ແລະ ມີເລ່ລ່ຽມຢູ່ສະເໝີ. (ໃນເລື່ອງນີ້ ເຮົາຂໍຮ້ອງພວກເຈົ້າອີກຄັ້ງໃຫ້ເປັນຄົນຊື່ສັດ).

ຖ້າເຈົ້າສາມາດບັນລຸທັງສາມສິ່ງນີ້, ແລ້ວເຈົ້າກໍຈະເປັນໜຶ່ງໃນຄົນໂຊກດີ, ເປັນຄົນທີ່ຄວາມຝັນໄດ້ກາຍເປັນຈິງ ແລະ ເປັນຄົນທີ່ໄດ້ຮັບໂຊກລາບທີ່ດີ. ບາງເທື່ອ ພວກເຈົ້າຈະປະຕິບັດເງື່ອນໄຂທີ່ບໍ່ໜ້າດຶງດູດໃຈທັງສາມເຫຼົ່ານີ້ ຫຼື ບາງເທື່ອ ເຈົ້າຈະປະຕິບັດກັບພວກມັນຢ່າງບໍ່ມີຄວາມຮັບຜິດຊອບ. ເຖິງຢ່າງໃດກໍຕາມ, ຈຸດປະສົງຂອງເຮົາແມ່ນເພື່ອເຮັດໃຫ້ຄວາມຝັນຂອງພວກເຈົ້າເປັນຈິງ ແລະ ເພື່ອນຳເອົາອຸດົມການຂອງພວກເຈົ້າໄປປະຕິບັດ, ບໍ່ແມ່ນເພື່ອເອົາພວກເຈົ້າມາລໍ້ຫຼິ້ນ ຫຼື ເພື່ອຫຼອກລວງພວກເຈົ້າ.

ຄວາມຮຽກຮ້ອງຂອງເຮົາອາດຈະທຳມະດາ, ແຕ່ສິ່ງທີ່ເຮົາກຳລັງບອກພວກເຈົ້າແມ່ນບໍ່ທຳມະດາຄືດັ່ງກັບໜຶ່ງບວກໜຶ່ງເທົ່າກັບສອງ. ຖ້າສິ່ງດຽວທີ່ພວກເຈົ້າເຮັດ ແມ່ນການເວົ້າກ່ຽວກັບສິ່ງນີ້ໂດຍບໍ່ມີເປົ້າໝາຍ ຫຼື ເວົ້າເລື້ອຍເປື່ອຍແບບເປົ່າຫວ່າງ ແລະ ຟັງຄືສູງສົ່ງ, ແລ້ວແບບແຜນຂອງພວກເຈົ້າ ແລະ ຄວາມປາດຖະໜາຂອງພວກເຈົ້າກໍຈະເປັນໜ້າເຈ້ຍທີ່ວ່າງເປົ່າຕະຫຼອດການ. ເຮົາຈະບໍ່ມີຄວາມຮູ້ສຶກສົງສານຜູ້ຄົນເຫຼົ່ານັ້ນໃນບັນດາພວກເຈົ້າທີ່ທົນທຸກທໍລະມານເປັນເວລາຫຼາຍປີ ແລະ ເຮັດວຽກຢ່າງໜັກແຕ່ບໍ່ມີຫຍັງສະແດງໃຫ້ເຫັນເປັນຮູບປະທຳ. ໃນທາງກົງກັນຂ້າມ, ເຮົາຈະປະຕິບັດຕໍ່ຄົນທີ່ບໍ່ໄດ້ເຮັດຕາມຄວາມຮຽກຮ້ອງຂອງເຮົາໂດຍການລົງໂທດ, ບໍ່ແມ່ນໂດຍການໃຫ້ລາງວັນ, ແຮງໄກທີ່ຈະເປັນຄວາມເຫັນອົກເຫັນໃຈ. ພວກເຈົ້າອາດຈິນຕະນາການວ່າ ໃນການເປັນຜູ້ຕິດຕາມເປັນເວລາຫຼາຍປີ ພວກເຈົ້າແມ່ນໄດ້ເຮັດວຽກຢ່າງໜັກບໍ່ວ່າໃນກໍລະນີໃດກໍຕາມ ແລະ ພວກເຈົ້າຄວນໄດ້ຮັບຖ້ວຍເຂົ້າໃນເຮືອນຂອງຂອງພຣະເຈົ້າຍ້ອນການເປັນຜູ້ໃຫ້ບໍລິການເທົ່ານັ້ນ. ເຮົາຈະເວົ້າວ່າ ພວກເຈົ້າສ່ວນໃຫຍ່ຄິດແບບນີ້ ຍ້ອນພວກເຈົ້າໄດ້ສະແຫວງຫາຫຼັກການກ່ຽວກັບວິທີການເອົາປຽບສິ່ງຕ່າງໆ ແລະ ບໍ່ຖືກເອົາປຽບຢູ່ສະເໝີ. ດ້ວຍເຫດນັ້ນ ເຮົາຈິ່ງກຳລັງບອກພວກເຈົ້າຕອນນີ້ດ້ວຍຄວາມຈິງຈັງແທ້ໆວ່າ: ເຮົາບໍ່ສົນວ່າ ວຽກໜັກຂອງເຈົ້າແມ່ນຄວນໄດ້ຮັບການສັນລະເສີນສໍ່າໃດ, ຄຸນວຸດທິຂອງເຈົ້າແມ່ນເປັນສິ່ງທີ່ໜ້າປະທັບໃຈພຽງໃດ, ເຈົ້າໄດ້ຕິດຕາມເຮົາຢ່າງໃກ້ຊິດສໍ່າໃດ, ເຈົ້າມີຊື່ສຽງສໍ່າໃດ ຫຼື ເຈົ້າໄດ້ປັບປຸງທັດສະນະຄະຕິຂອງເຈົ້າຫຼາຍສໍ່າໃດ; ຕາບໃດທີ່ເຈົ້າບໍ່ໄດ້ເຮັດຕາມທີ່ເຮົາຮຽກຮ້ອງ, ເຈົ້າ

ກໍຈະບໍ່ສາມາດໄດ້ຮັບການຍ້ອງຍໍຈາກເຮົາ. ໃຫ້ຂີດຂ້າຄວາມຄິດ ແລະ ການຄຳນວນເຫຼົ່ານັ້ນຂອງພວກເຈົ້າໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້ ແລະ ເລີ່ມປະຕິບັດກັບຄວາມຮຽກຮ້ອງຂອງເຮົາດ້ວຍຄວາມຈິງຈັງ; ບໍ່ສະນັ້ນ, ເຮົາຈະຫັນປ່ຽນທຸກໆຄົນໃຫ້ເປັນຂີ້ເຖົ່າເພື່ອສິ້ນສຸດພາລະກິດຂອງເຮົາ ແລະ ຫຼາຍສຸດກໍປ່ຽນພາລະກິດ ແລະ ການທົນທຸກເປັນເວລາຫຼາຍປີຂອງເຮົາໃຫ້ກາຍເປັນສິ່ງທີ່ໄຮ້ຄວາມໝາຍຍ້ອນເຮົາບໍ່ສາມາດນຳສັດຕູ ແລະ ຜູ້ຄົນທີ່ມີການປາກົດຕົວຂອງຊາຕານເຂົ້າມາໃນອານາຈັກຂອງເຮົາ ຫຼື ພາພວກເຂົາໄປສູ່ຍຸກຕໍ່ໄປ.

ເຮົາມີຄວາມຫວັງຫຼາຍຢ່າງ. ເຮົາປາດຖະໜາໃຫ້ພວກເຈົ້າປະພຶດຕົນໃນທາງທີ່ຖືກຕ້ອງ ແລະ ດີຂຶ້ນ, ປະຕິບັດໜ້າທີ່ຂອງພວກເຈົ້າຢ່າງຊື່ສັດ, ມີຄວາມຈິງ ແລະ ຄວາມເປັນມະນຸດ, ເປັນຄົນທີ່ສາມາດມອບທຸກສິ່ງ ແລະ ແມ່ນແຕ່ຊີວິດຂອງຕົນເພື່ອພຣະເຈົ້າ ແລະ ອື່ນໆອີກ. ຄວາມຫວັງທັງໝົດນີ້ແມ່ນເກີດຈາກຄວາມຂາດເຂີນ ແລະ ຄວາມເສື່ອມຊາມຂອງພວກເຈົ້າ ແລະ ຄວາມບໍ່ເຊື່ອຟັງ. ຖ້າບໍ່ມີການສົນທະນາໃດທີ່ເຮົາມີກັບພວກເຈົ້າທີ່ຫພຽງພໍທີ່ຈະດຶງດູດຄວາມສົນໃຈຂອງພວກເຈົ້າ, ແລ້ວມັນກໍ່ມີແນວໂນ້ມວ່າສິ່ງດຽວທີ່ເຮົາສາມາດເຮັດໄດ້ກໍຄືບໍ່ເວົ້າຫຍັງອີກ. ຢ່າງໃດກໍຕາມ, ພວກເຈົ້າແມ່ນເຂົ້າໃຈຜົນຮັບຂອງສິ່ງນັ້ນ. ເຮົາບໍ່ຄ່ອຍພັກຜ່ອນຫຼາຍ, ສະນັ້ນ ຖ້າເຮົາບໍ່ເວົ້າ ເຮົາກໍຈະເຮັດບາງສິ່ງເພື່ອໃຫ້ຜູ້ຄົນເບິ່ງ. ເຮົາສາມາດເຮັດໃຫ້ລີ້ນຂອງຄົນເນົ່າເປື່ອຍ ຫຼື ເຮັດໃຫ້ບາງຄົນຕາຍແບບຖືກຕັດອອກເປັນສິ້ນສ່ວນ ຫຼື ເຮັດໃຫ້ເສັ້ນປະສາດຂອງຄົນຜິດປົກກະຕິ ແລະ ເຮັດໃຫ້ພວກເຂົາເບິ່ງໜ້າລັງກຽດໃນຫຼາຍວິທີທາງ. ແລ້ວອີກຄັ້ງ ເຮົາສາມາດເຮັດໃຫ້ຄົນທົນທຸກກັບຄວາມເຈັບປວດທີ່ເຮົາໄດ້ຕົ້ມໄວ້ໂດຍສະເພາະພວກເຂົາ. ດ້ວຍວິທີນີ້ ເຮົາຈະຮູ້ສຶກຍິນດີ, ມີຄວາມສຸກຫຼາຍ ແລະ ພໍໃຈເປັນຢ່າງຍິ່ງ. ມັນຖືກເວົ້າຢູ່ສະເໝີວ່າ "ຄວາມດີແມ່ນຖືກຕອບແທນດ້ວຍຄວາມດີ ແລະ ຄວາມຊົ່ວດ້ວຍຄວາມຊົ່ວ", ແລ້ວເປັນຫຍັງໃນຕອນນີ້ຈຶ່ງບໍ່ເປັນແບບນັ້ນ? ຖ້າເຈົ້າຕ້ອງການຕໍ່ຕ້ານເຮົາ ແລະ ຕັດສິນບາງຢ່າງກ່ຽວກັບເຮົາ, ແລ້ວເຮົາກໍຈະເຮັດໃຫ້ປາກຂອງເຈົ້າເນົ່າເປື່ອຍ ແລະ ນັ້ນກໍຈະເຮັດໃຫ້ເຮົາດີໃຈຈົນບໍ່ມີສິ້ນສຸດ. ນີ້ກໍຍ້ອນວ່າ ໃນທີ່ສຸດແລ້ວ ສິ່ງທີ່ເຈົ້າໄດ້ເຮັດບໍ່ແມ່ນຄວາມຈິງ, ແຮງໄກທີ່ມັນກ່ຽວຂ້ອງກັບຊີວິດ, ໃນຂະນະທີ່ທຸກສິ່ງທີ່ເຮົາກະທຳແມ່ນຄວາມຈິງ; ທຸກການກະທຳຂອງເຮົາແມ່ນກ່ຽວຂ້ອງກັບຫຼັກການຂອງພາລະກິດຂອງເຮົາ ແລະ ພຣະດຳລັດປົກຄອງທີ່ເຮົາໄດ້ວາງອອກ. ດັ່ງນັ້ນ, ເຮົາຂໍຊຸກຍູ້ໃຫ້ພວກເຈົ້າແຕ່ລະຄົນຈົ່ງສະສົມຄຸນງາມຄວາມດີ, ຢຸດເຮັດຄວາມຊົ່ວຕ່າງໆ ແລະ ເອົາໃຈໃສ່ກັບການຮຽກຮ້ອງຂອງເຮົາໃນເວລາວ່າງຂອງເຈົ້າ. ເມື່ອນັ້ນເຮົາກໍຈະຮູ້ສຶກປິຕິຍິນດີ. ຖ້າພວກເຈົ້າຕ້ອງປະກອບສ່ວນ (ຫຼື ບໍລິຈາກ) ເຂົ້າໃນຄວາມຈິງແມ່ນແຕ່ໜຶ່ງສ່ວນພັນຂອງຄວາມພະຍາຍາມທີ່ພວກເຈົ້າເຮັດໃຫ້ກັບເນື້ອໜັງ, ເຮົາກໍຂໍເວົ້າວ່າ ເຈົ້າຈະບໍ່ເຮັດຜິດຢູ່ເລື້ອຍໆ ແລະ ບໍ່ມີປາກທີ່ເນົ່າເປື່ອຍ. ສິ່ງນີ້ບໍ່ຊັດເຈນບໍ?

ຍິ່ງການເຮັດຜິດຂອງເຈົ້າຫຼາຍສໍ່າໃດ, ໂອກາດຂອງເຈົ້າໃນການໄດ້ຮັບຈຸດໝາຍປາຍທາງທີ່ດີກໍຍິ່ງໜ້ອຍລົງ. ກົງກັນຂ້າມ, ຍິ່ງການເຮັດຜິດຂອງເຈົ້າໜ້ອຍສໍ່າໃດ, ໂອກາດຂອງເຈົ້າໃນການຖືກພຣະເຈົ້າຍ້ອງຍໍກໍຍິ່ງຫຼາຍຂຶ້ນ. ຖ້າການເຮັດຜິດຂອງເຈົ້າເພີ່ມຂຶ້ນຮອດຈຸດທີ່ວ່າ ມັນເປັນໄປບໍ່ໄດ້ທີ່ເຮົາ

ຈະຍົກໂທດໃຫ້ເຈົ້າ, ແລ້ວເຈົ້າກໍຈະສິ້ນເປືອງໂອກາດໃນການຖືກຍົກໂທດທັງໝົດ. ໃນກໍລະນີນັ້ນ ຈຸດໝາຍປາຍທາງຂອງເຈົ້າຈະບໍ່ຢູ່ເທິງ ແຕ່ຈະຢູ່ລຸ່ມ. ຖ້າເຈົ້າບໍ່ເຊື່ອເຮົາ ແລ້ວກໍຈົ່ງມີຄວາມກ້າຫານ ແລະ ເຮັດໃນສິ່ງທີ່ຜິດ ແລະ ຫຼັງຈາກນັ້ນ ກໍໃຫ້ເບິ່ງວ່າ ມັນຈະນຳຫຍັງມາໃຫ້ເຈົ້າ. ຖ້າເຈົ້າເປັນຄົນທີ່ຈິງໃຈແທ້ກັບການປະຕິບັດຄວາມຈິງ ແລ້ວເຈົ້າກໍຈະມີໂອກາດທີ່ຄວາມຜິດຂອງເຈົ້າຈະໄດ້ຮັບການຍົກໂທດຢ່າງແນ່ນອນ ແລະ ເຈົ້າຈະບໍ່ເຊື່ອຟັງໜ້ອຍລົງເລື້ອຍໆ. ຖ້າເຈົ້າເປັນຄົນທີ່ບໍ່ເຕັມໃຈປະຕິບັດຄວາມຈິງ, ແລ້ວການເຮັດຜິດຂອງເຈົ້າຕໍ່ໜ້າພຣະເຈົ້າກໍຈະເພີ່ມທະວີຂຶ້ນຢ່າງແນ່ນອນ ແລະ ເຈົ້າຈະບໍ່ເຊື່ອຟັງຫຼາຍຂຶ້ນຫເລື້ອຍໆ, ຈົນວ່າເຈົ້າເຖິງຂີດຈຳກັດ ເຊິ່ງຈະເປັນເວລາທີ່ເຈົ້າຖືກທຳລາຍຢ່າງສິ້ນເຊີງ. ນີ້ຈະເປັນເວລາທີ່ຄວາມຝັນອັນສວຍງາມກ່ຽວກັບການຮັບພອນຂອງເຈົ້າຈະຖືກທຳລາຍ. ຈົ່ງຢ່າຖືວ່າການເຮັດຜິດຂອງເຈົ້າແມ່ນເປັນຄວາມຜິດຂອງຄົນທີ່ຍັງບໍ່ບັນລຸນິຕິພາວະ ຫຼື ຄົນໂງ່; ຢ່າໃຊ້ຂໍ້ອ້າງວ່າເຈົ້າບໍ່ໄດ້ປະຕິບັດຄວາມຈິງ ເພາະຄວາມສາມາດຂອງເຈົ້າທີ່ມີໜ້ອຍໄດ້ເຮັດໃຫ້ມັນເປັນໄປບໍ່ໄດ້ທີ່ຈະປະຕິບັດແບບນັ້ນ. ຍິ່ງໄປກວ່ານັ້ນ ຢ່າພຽງແຕ່ຖືວ່າ ການເຮັດຜິດທີ່ເຈົ້າໄດ້ເຮັດນັ້ນແມ່ນເປັນການກະທຳຂອງບາງຄົນທີ່ບໍ່ຮູ້ດີໄປກວ່ານີ້. ຖ້າເຈົ້າເກັ່ງໃນການຍົກໂທດໃຫ້ຕົວເອງ ແລະ ເກັ່ງໃນການປະຕິບັດກັບຕົວເອງດ້ວຍໃຈກວ້າງຂວາງ, ແລ້ວເຮົາກໍຂໍເວົ້າວ່າ ເຈົ້າແມ່ນຄົນຂີ້ຢ້ານຜູ້ທີ່ຈະບໍ່ມີວັນໄດ້ຮັບຄວາມຈິງ ຫຼື ການເຮັດຜິດຂອງເຈົ້າກໍຈະບໍ່ຢຸດຫຼອກຫຼອນເຈົ້າ; ພວກມັນຈະຫ້າມບໍ່ໃຫ້ເຈົ້າເຮັດຕາມຄວາມຮຽກຮ້ອງຂອງຄວາມຈິງ ແລະ ເຮັດໃຫ້ເຈົ້າເປັນໝູ່ຮ່ວມເດີນທາງທີ່ຈົງຮັກພັກດີຂອງຊາຕານຕະຫຼອດໄປ. ຄຳແນະນຳຂອງເຮົາໃຫ້ກັບເຈົ້າກໍຍັງຄືເກົ່າ: ຢ່າພຽງແຕ່ສົນໃຈກັບປາຍທາງຂອງເຈົ້າ ໃນຂະນະທີ່ເບິ່ງຂ້າມການເຮັດຜິດຂອງເຈົ້າທີ່ເຊື່ອງຊ້ອນຢູ່; ຈົ່ງຖືການເຮັດຜິດຂອງເຈົ້າຢ່າງຈິງຈັງ ແລະ ຢ່າເບິ່ງຂ້າມການເຮັດຜິດທັງໝົດຂອງເຈົ້າຍ້ອນເປັນຫ່ວງຕໍ່ຈຸດໝາຍປາຍທາງຂອງເຈົ້າ.

# ມັນເປັນເລື່ອງສຳຄັນຫຼາຍ ທີ່ຈະເຂົ້າໃຈອຸປະນິໄສຂອງພຣະເຈົ້າ

ມີຫຼາຍສິ່ງທີ່ເຮົາຄາດຫວັງໃຫ້ພວກເຈົ້າບັນລຸ. ເຖິງແນວໃດກໍຕາມ ບໍ່ແມ່ນການກະທຳທັງໝົດຂອງພວກເຈົ້າ, ບໍ່ແມ່ນທຸກສິ່ງກ່ຽວກັບຊີວິດຂອງພວກເຈົ້າທີ່ສາມາດສະໜອງສິ່ງທີ່ເຮົາຮຽກຮ້ອງ ສະນັ້ນ ເຮົາບໍ່ມີທາງເລືອກອື່ນນອກຈາກທີ່ຈະເຂົ້າປະເດັນໂດຍກົງ ແລະ ອະທິບາຍກັບພວກເຈົ້າເຖິງຄວາມປະສົງຂອງເຮົາ. ເນື່ອງຈາກການສັງເກດຂອງພວກເຈົ້າຍັງຕໍ່າ ແລະ ການເຂົ້າໃຈຂອງພວກເຈົ້າກໍຕໍ່າເຊັ່ນດຽວກັນ ພວກເຈົ້າຈຶ່ງເກືອບບໍ່ຮູ້ເຖິງອຸປະນິໄສ ແລະ ແກ່ນແທ້ຂອງເຮົາເລີຍ ແລະ ດ້ວຍເຫດນັ້ນ ມັນຈຶ່ງເປັນເລື່ອງຮີບດ່ວນທີ່ເຮົາຕ້ອງແຈ້ງໃຫ້ພວກເຈົ້າຮູ້ກ່ຽວກັບສິ່ງເຫຼົ່ານັ້ນ. ບໍ່ວ່າແຕ່ກ່ອນເຈົ້າໄດ້ເຂົ້າໃຈຫຼາຍສໍ່າໃດກໍຕາມ, ເຈົ້າປາຖະໜາທີ່ຈະເຂົ້າໃຈບັນຫາເຫຼົ່ານີ້ ຫຼື ບໍ່, ເຮົາຍັງຕ້ອງອະທິບາຍສິ່ງເຫຼົ່ານີ້ໃຫ້ເຈົ້າຮູ້ຢ່າງລະອຽດ. ບັນຫາເຫຼົ່ານີ້ບໍ່ແມ່ນສິ່ງທີ່ແປກໃໝ່ທັງໝົດສຳລັບພວກເຈົ້າ ແຕ່ພວກເຈົ້າກໍຂາດຄວາມເຂົ້າໃຈຫຼາຍສິ່ງຢ່າງ, ຄວາມຄຸ້ນເຄີຍຫຼາຍຢ່າງກັບຄວາມໝາຍກ່ຽວກັບສິ່ງເຫຼົ່ານັ້ນ. ພວກເຈົ້າຫຼາຍຄົນພຽງແຕ່ມີຄວາມເຂົ້າໃຈແບບມືດມົວ ແລະ ຄວາມເຂົ້າໃຈພຽງແຕ່ບາງສ່ວນ ແລະ ບໍ່ຄົບຖ້ວນເລີຍ. ເພື່ອຊ່ວຍໃຫ້ພວກເຈົ້າປະຕິບັດຄວາມຈິງໄດ້ດີຍິ່ງຂຶ້ນ ນັ້ນກໍຄື ເພື່ອນຳພຣະທຳຂອງເຮົາເຂົ້າສູ່ການປະຕິບັດໄດ້ດີຍິ່ງຂຶ້ນ ເຮົາຄິດວ່າ ສິ່ງເຫຼົ່ານີ້ຄືບັນຫາສິ່ງທີ່ພວກເຈົ້າຕ້ອງຮຽນຮູ້ຈັກກ່ອນ ແລະ ສຳຄັນທີ່ສຸດ. ຖ້າບໍ່ດັ່ງນັ້ນ ຄວາມເຊື່ອຂອງພວກເຈົ້າກໍຈະຍັງຄົງບໍ່ແຈ່ມແຈ້ງ, ໜ້າຊື່ໃຈຄົດ ແລະ ເຕັມໄປດ້ວຍກັບດັກແຫ່ງສາສະໜາ. ຖ້າເຈົ້າບໍ່ເຂົ້າໃຈອຸປະນິໄສຂອງພຣະເຈົ້າ ແລ້ວມັນກໍເປັນໄປບໍ່ໄດ້ທີ່ເຈົ້າຈະປະຕິບັດພາລະກິດທີ່ເຈົ້າຄວນປະຕິບັດເພື່ອພຣະອົງ. ຖ້າຫາກເຈົ້າບໍ່ຮູ້ຈັກແກ່ນແທ້ຂອງພຣະເຈົ້າ ແລ້ວມັນກໍ່ເປັນໄປບໍ່ໄດ້ທີ່ເຈົ້າຈະສະແດງການເຄົາລົບ ແລະ ຄວາມຢຳເກງຕໍ່ພຣະອົງ; ກົງກັນຂ້າມ ຈະມີພຽງຄວາມພໍເປັນພິທີໂດຍບໍ່ເອົາໃຈໃສ່ ແລະ ການເວົ້າແຕ່ປາກ ແລະ ຍິ່ງໄປກວ່ານັ້ນພາກັນໝິ່ນປະໝາດຈົນຕິດນິໄສ. ເຖິງແມ່ນວ່າ ການເຂົ້າໃຈອຸປະນິໄສຂອງພຣະເຈົ້າສຳຄັນແນ່ນອນ ແລະ ການຮູ້ຈັກແກ່ນແທ້ຂອງພຣະເຈົ້າກໍບໍ່ສາມາດເບິ່ງຂ້າມໄດ້, ກໍບໍ່ມີໃຜເຄີຍກວດສອບ ຫຼື ຄົ້ນຫາຢ່າງລະອຽດໃນບັນຫາເຫຼົ່ານີ້. ມັນເຫັນໄດ້ຢ່າງຊັດເຈນວ່າ ພວກເຈົ້າທັງໝົດໄດ້ປ່ອຍປະລະເລີຍບົດບັນຍັດແຫ່ງການຄຸ້ມຄອງທີ່ເຮົາໄດ້ປະກາດນຳໃຊ້. ຖ້າພວກເຈົ້າບໍ່ເຂົ້າໃຈອຸປະນິໄສຂອງພຣະເຈົ້າ ແລ້ວພວກເຈົ້າກໍຈະເຮັດຜິດໃຈພຣະອົງຢ່າງແນ່ນອນ. ການເຮັດຜິດຕໍ່ອຸປະນິໄສຂອງພຣະເຈົ້າກໍເທົ່າກັບການເຮັດໃຫ້ພຣະເຈົ້າເອງໂກດຮ້າຍ ເຊິ່ງໃນກໍລະນີນັ້ນ ຜົນສຸດທ້າຍຂອງການກະທຳຂອງເຈົ້າຈະເປັນການລະເມີດກົດບັນຍັດແຫ່ງການຄຸ້ມຄອງ. ບັດນີ້ ເຈົ້າຄວນຮູ້ວ່າເມື່ອເຈົ້າເຂົ້າໃຈເຖິງແກ່ນແທ້ຂອງພຣະເຈົ້າ, ເຈົ້າກໍສາມາດເຂົ້າໃຈເຖິງອຸປະນິໄສຂອງພຣະອົງເຊັ່ນກັນ ແລະ ເມື່ອເຈົ້າເຂົ້າໃຈເຖິງອຸປະນິໄສຂອງພຣະອົງ, ເຈົ້າກໍຈະເຂົ້າໃຈບົດບັນຍັດແຫ່ງການຄຸ້ມຄອງເຊັ່ນກັນ. ແນ່ນອນ ຫຼາຍຢ່າງຂອງສິ່ງຖືກລະບຸໄວ້ພາຍໃນບົດບັນຍັດແຫ່ງການຄຸ້ມຄອງໄດ້ລາມເຖິງອຸປະນິໄສຂອງພຣະເຈົ້າ ແຕ່ບໍ່ແມ່ນອຸປະນິໄສທັງໝົດຂອງພຣະອົງຖືກສະແດງອອກພາຍໃນບົດບັນຍັດ

ແຫ່ງການຄຸ້ມຄອງ; ດ້ວຍເຫດນັ້ນ ພວກເຈົ້າຕ້ອງດຳເນີນໄປອີກໜຶ່ງກ້າວເພື່ອພັດທະນາຄວາມເຂົ້າໃຈຂອງພວກເຈົ້າກ່ຽວກັບອຸປະນິໄສຂອງພຣະເຈົ້າ.

ໃນປັດຈຸບັນ ເຮົາບໍ່ໄດ້ກ່າວກັບພວກເຈົ້າໃນບົດສົນທະນາແບບທຳມະດາ ສະນັ້ນ ມັນຈຳເປັນທີ່ພວກເຈົ້າຕ້ອງປະຕິບັດຕໍ່ພຣະທຳຂອງເຮົາຢ່າງລະມັດລະວັງ ແລະ ຍິ່ງໄປກວ່ານັ້ນກໍຄືໄຕ່ຕອງພຣະທຳເຫຼົ່ານັ້ນຢ່າງເລິກຊຶ້ງ. ສິ່ງທີ່ເຮົາໝາຍເຖິງກໍຄື ພວກເຈົ້າໄດ້ອຸທິດຄວາມພະຍາຍາມໜ້ອຍເກີນໄປໃຫ້ກັບພຣະທຳທີ່ເຮົາໄດ້ກ່າວ. ພວກເຈົ້າແຮງເຕັມໃຈໜ້ອຍກວ່າທີ່ຈະໄຕ່ຕອງອຸປະນິໄສຂອງພຣະເຈົ້າ; ໜ້ອຍຄັ້ງທີ່ຈະມີຄົນໃສ່ຄວາມພະຍາຍາມໃນສິ່ງນັ້ນ. ດ້ວຍເຫດຜົນນີ້ ເຮົາຈຶ່ງເວົ້າວ່າ ຄວາມເຊື່ອຂອງພວກເຈົ້າບໍ່ໄດ້ເປັນຫຍັງໄປຫຼາຍກວ່າການເວົ້າໂອ້ອວດເທົ່ານັ້ນ. ແມ່ນແຕ່ໃນປັດຈຸບັນ ກໍບໍ່ມີຄົນໃດໃນພວກເຈົ້າໄດ້ອຸທິດຄວາມພະຍາຍາມຢ່າງຈິງຈັງຕໍ່ຈຸດອ່ອນທີ່ສຸດຂອງພວກເຈົ້າ. ພວກເຈົ້າປ່ອຍໃຫ້ເຮົາຜິດຫວັງຫຼັງຈາກຄວາມເຈັບປວດທັງໝົດທີ່ເຮົາໄດ້ຮັບສຳລັບພວກເຈົ້າ. ບໍ່ແປກເລີຍທີ່ພວກເຈົ້າບໍ່ສົນໃຈພຣະເຈົ້າ ແລະ ຊີວິດຂອງພວກເຈົ້າປາສະຈາກຄວາມຈິງ. ຄົນປະເພດດັ່ງກ່າວຈະຖືວ່າເປັນໄພ່ພົນຂອງພຣະເຈົ້າໄດ້ແນວໃດ? ພຣະບັນຍັດໃນສະຫວັນຈະບໍ່ຍອມທົນຕໍ່ສິ່ງດັ່ງກ່າວ! ຍ້ອນພວກເຈົ້າມີຄວາມເຂົ້າໃຈໜ້ອຍຫຼາຍໃນສິ່ງນີ້ ເຮົາຈຶ່ງບໍ່ມີທາງເລືອກອື່ນນອກຈາກຈະເສຍສະຫຼະລົມຫາຍໃຈຕື່ມອີກ.

ອຸປະນິໄສຂອງພຣະເຈົ້າເປັນເລື່ອງທີ່ເບິ່ງຄືວ່າເປັນນາມມະທຳຕໍ່ທຸກຄົນ ແລະ ຍິ່ງໄປກວ່ານັ້ນຍັງເປັນສິ່ງທີ່ທຸກຄົນບໍ່ສາມາດຍອມຮັບໄດ້ຢ່າງງ່າຍດາຍ ຍ້ອນວ່າອຸປະນິໄສຂອງພຣະເຈົ້າບໍ່ຄືບຸກຄະລິກຂອງມະນຸດ. ພຣະເຈົ້າກໍມີຄວາມຮູ້ສຶກປິຕິຍິນດີ, ຄວາມໂກດຮ້າຍ, ຄວາມໂສກເສົ້າ ແລະ ຄວາມສຸກເຊັ່ນກັນ, ແຕ່ຄວາມຮູ້ສຶກເຫຼົ່ານີ້ແຕກຕ່າງຈາກຄວາມຮູ້ສຶກຂອງມະນຸດ. ພຣະເຈົ້າເປັນສິ່ງທີ່ພຣະອົງເປັນ ແລະ ພຣະອົງກໍມີສິ່ງທີ່ພຣະອົງມີ. ທຸກສິ່ງທຸກຢ່າງທີ່ພຣະອົງສະແດງອອກ ແລະ ເປີດເຜີຍແມ່ນການສະແດງເຖິງແກ່ນແທ້ຂອງພຣະອົງ ແລະ ຕົວຕົນຂອງພຣະອົງ. ສິ່ງທີ່ພຣະອົງເປັນ ແລະ ສິ່ງທີ່ພຣະອົງມີ ພ້ອມກັບແກ່ນແທ້ ແລະ ຕົວຕົນຂອງພຣະອົງ ແມ່ນສິ່ງທີ່ບໍ່ມີມະນຸດຄົນໃດສາມາດແທນທີ່ໄດ້. ອຸປະນິໄສຂອງພຣະອົງປະກອບດ້ວຍຄວາມຮັກທີ່ພຣະອົງມີຕໍ່ມະນຸດ, ການປອບໃຈມະນຸດ, ຄວາມກຽດຊັງມະນຸດ ແລະ ຍິ່ງໄປກວ່ານັ້ນຍັງມີຄວາມເຂົ້າໃຈມະນຸດຢ່າງລະອຽດ. ເຖິງຢ່າງໃດກໍຕາມບຸກຄະລິກຂອງມະນຸດອາດແມ່ນການເບິ່ງໂລກໃນແງ່ດີ, ມີຊີວິດຊີວາ ຫຼື ປາສະຈາກຄວາມຮູ້ສຶກ. ອຸປະນິໄສຂອງພຣະເຈົ້າເປັນຂອງພຣະຜູ້ປົກຄອງຂອງທຸກສິ່ງ ແລະ ທຸກຢ່າງທີ່ມີຊີວິດ ເຊິ່ງເປັນຂອງພຣະຜູ້ເປັນເຈົ້າແຫ່ງການເນລະມິດສ້າງທັງໝົດ. ອຸປະນິໄສຂອງພຣະອົງສະແດງເຖິງກຽດຕິຍົດ, ລິດອຳນາດ, ຄວາມສະຫງ່າງາມ, ຄວາມຍິ່ງໃຫຍ່ ແລະ ເໜືອໄປກວ່ານັ້ນກໍຄືການມີລິດອຳນາດສູງສຸດ. ອຸປະນິໄສຂອງພຣະອົງແມ່ນສັນຍາລັກແຫ່ງສິດອຳນາດ, ສັນຍາລັກຂອງທຸກສິ່ງທີ່ຊອບທຳ, ສັນຍາລັກຂອງທຸກສິ່ງທີ່ສວຍງາມ ແລະ ດີ. ຍິ່ງໄປກວ່ານີ້ ມັນຍັງເປັນສັນຍາລັກຂອງພຣະອົງຜູ້ເຊິ່ງບໍ່ມີຄວາມມືດ ແລະ ກອງກຳລັງຂອງສັດຕູໃດທີ່ສາມາດເອົາຊະນະ ຫຼື ຮຸກຮານໄດ້ ພ້ອມທັງເປັນສັນຍາລັກຂອງພຣະອົງຜູ້ເຊິ່ງບໍ່ມີສິ່ງຖືກສ້າງໃດທີ່ສາມາດລ່ວງເກີນໄດ້ (ຫຼື ພຣະອົງຈະບໍ່ອົດທົນຕໍ່ການເຮັດຜິດ).

ອຸປະນິໄສຂອງພຣະອົງເປັນສັນຍາລັກແຫ່ງລິດອຳນາດສູງສຸດ. ບໍ່ມີຄົນໃດ ຫຼື ກຸ່ມຄົນໃດທີ່ສາມາດ ຫຼື ອາດລົບກວນພາລະກິດຂອງພຣະອົງ ຫຼື ອຸປະນິໄສຂອງພຣະອົງ. ແຕ່ບຸກຄະລິກຂອງມະນຸດຄືສັນຍາລັກແຫ່ງອຳນາດເລັກນ້ອຍທີ່ມະນຸດມີເໜືອກວ່າສັດເທົ່ານັ້ນ. ມະນຸດໃນຕົວເຂົາ ແລະ ດ້ວຍຕົວເຂົາເອງແມ່ນບໍ່ມີສິດອຳນາດ, ບໍ່ມີການປົກຄອງຕົນເອງ ແລະ ບໍ່ມີຄວາມສາມາດຢູ່ເໜືອຕົນເອງ, ແຕ່ໃນແກ່ນແທ້ຂອງເຂົາແລ້ວ ເຂົາເປັນຄົນທີ່ໝອບຢູ່ພາຍໃຕ້ຄວາມເມດຕາຂອງທຸກລັກສະນະຂອງຜູ້ຄົນ, ເຫດການ ແລະ ສິ່ງຂອງຕ່າງໆ. ຄວາມປິຕິຍິນດີຂອງພຣະເຈົ້າກໍເນື່ອງຈາກການມີຢູ່ ແລະ ການປາກົດຂອງຄວາມຊອບທຳ ແລະ ແສງສະຫວ່າງ, ຍ້ອນການທຳລາຍຄວາມມືດ ແລະ ສິ່ງຊົ່ວຮ້າຍ. ພຣະອົງຊື່ນຊົມຍິນດີ ໃນການນຳແສງສະຫວ່າງ ແລະ ຊີວິດທີ່ດີມາໃຫ້ກັບມະນຸດຊາດ; ຄວາມຍິນດີຂອງພຣະອົງແມ່ນຄວາມຍິນດີທີ່ຊອບທຳ ເປັນສັນຍາລັກແຫ່ງການມີຢູ່ຂອງທຸກສິ່ງທີ່ຢູ່ໃນດ້ານບວກ ແລະ ຍິ່ງໄປກວ່ານັ້ນກໍຍັງເປັນສັນຍາລັກແຫ່ງຄວາມເປັນສິລິມຸງຄຸນ. ຄວາມໂກດຮ້າຍຂອງພຣະເຈົ້າແມ່ນເນື່ອງຈາກຄວາມເສຍຫາຍທີ່ການເປັນຢູ່ ແລະ ການແຊກແຊງຂອງຄວາມບໍ່ຍຸຕິທຳໄດ້ນຳມາສູ່ມະນຸດຊາດຂອງພຣະອົງ, ຍ້ອນການມີຢູ່ຂອງສິ່ງຊົ່ວຮ້າຍ ແລະ ຄວາມມືດ, ຍ້ອນການມີຢູ່ຂອງສິ່ງທີ່ຂັບໄລ່ຄວາມຈິງອອກ ແລະ ຍິ່ງໄປກວ່ານັ້ນ ຍ້ອນການມີຢູ່ຂອງສິ່ງທີ່ຕໍ່ຕ້ານສິ່ງທີ່ດີ ແລະ ສວຍງາມ. ຄວາມໂກດຮ້າຍຂອງພຣະອົງເປັນສັນຍາລັກບອກວ່າ ທຸກສິ່ງທີ່ຢູ່ໃນດ້ານລົບຈະບໍ່ມີຢູ່ອີກຕໍ່ໄປ ແລະ ຍິ່ງໄປກວ່ານັ້ນມັນຍັງເປັນສັນຍາລັກແຫ່ງຄວາມບໍລິສຸດຂອງພຣະອົງ. ຄວາມໂສກເສົ້າຂອງພຣະອົງແມ່ນເນື່ອງຈາກມະນຸດຊາດ ເຊິ່ງເປັນຄົນທີ່ພຣະອົງຄາດຫວັງໃຫ້ແກ່ພວກເຂົາ ແຕ່ໄດ້ຕົກຢູ່ໃນຄວາມມືດ, ຍ້ອນວ່າພາລະກິດທີ່ພຣະອົງປະຕິບັດໃນມະນຸດບໍ່ເປັນໄປຕາມຄວາມຄາດຫວັງຂອງພຣະອົງ ແລະ ຍ້ອນວ່າມະນຸດຊາດທີ່ພຣະອົງຮັກນັ້ນລ້ວນແລ້ວແຕ່ບໍ່ສາມາດດຳລົງຊີວິດໃນແສງສະຫວ່າງ. ພຣະອົງຮູ້ສຶກໂສກເສົ້າຕໍ່ມະນຸດຊາດທີ່ໄຮ້ດຽງສາ, ຕໍ່ມະນຸດທີ່ຊື່ສັດແຕ່ບໍ່ມີຄວາມຮູ້ ແລະ ຕໍ່ມະນຸດທີ່ດີແຕ່ຂາດມຸມມອງຂອງເຂົາເອງ. ຄວາມໂສກເສົ້າຂອງພຣະອົງເປັນສັນຍາລັກແຫ່ງຄວາມດີຂອງພຣະອົງ ແລະ ຄວາມເມດຕາຂອງພຣະອົງ, ເປັນສັນຍາລັກແຫ່ງຄວາມງົດງາມ ແລະ ຄວາມກະລຸນາ. ແນ່ນອນ ຄວາມສຸກຂອງພຣະອົງມາຈາກການເອົາຊະນະສັດຕູ ແລະ ຮັບເອົາຄວາມເຊື່ອທີ່ດີຂອງມະນຸດ. ຍິ່ງໄປກວ່ານີ້ ມັນເກີດຈາກການຂັບໄລ່ ແລະ ການທຳລາຍກອງກຳລັງສັດຕູທັງໝົດ ແລະ ຍ້ອນມະນຸດຊາດຮັບຊີວິດທີ່ດີ ແລະ ສະຫງົບສຸກ. ຄວາມສຸກຂອງພຣະເຈົ້າບໍ່ຄືກັນກັບຄວາມສຸກຂອງມະນຸດ; ກົງກັນຂ້າມ ມັນເປັນຄວາມຮູ້ສຶກໃນການເກັບກ່ຽວໝາກຜົນທີ່ດີ, ເປັນຄວາມຮູ້ສຶກທີ່ຍິ່ງໃຫຍ່ຫຼາຍກວ່າຄວາມປິຕິຍິນດີ. ຄວາມສຸກຂອງພຣະອົງເປັນສັນຍາລັກຂອງມະນຸດຊາດທີ່ເປັນອິດສະຫຼະຈາກຄວາມທົນທຸກທໍລະມານຕັ້ງແຕ່ເວລານີ້ເປັນຕົ້ນໄປ ແລະ ເປັນສັນຍາລັກຂອງມະນຸດທີ່ເຂົ້າສູ່ໂລກແຫ່ງແສງສະຫວ່າງ. ໃນທາງກົງກັນຂ້າມ ຄວາມຮູ້ສຶກທັງໝົດຂອງມະນຸດຊາດເກີດຂຶ້ນກໍເພື່ອຜົນປະໂຫຍດຂອງເຂົາເອງ ບໍ່ແມ່ນເພື່ອຄວາມຊອບທຳ, ແສງສະຫວ່າງ ຫຼື ສິ່ງທີ່ສວຍງາມ ແລະ ໜ້ອຍທີ່ສຸດກໍຄືເພື່ອຄວາມກະລຸນາທີ່ສະຫວັນປະທານໃຫ້. ຄວາມຮູ້ສຶກຂອງມະນຸດຊາດແມ່ນຄວາມເຫັນແກ່ຕົວ ແລະ ເປັນຂອງໂລກແຫ່ງຄວາມມືດມົວ. ສິ່ງເຫຼົ່ານັ້ນບໍ່ໄດ້ມີຢູ່ເພື່ອຜົນປະໂຫຍດແຫ່ງຄວາມປະສົງ ແຮງໄກທີ່ຈະແມ່ນເພື່ອ

ແຜນການຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ມະນຸດ ແລະ ພຣະເຈົ້າບໍ່ສາມາດກ່າວເຖິງໃນລົມຫາຍໃຈດຽວກັນໄດ້. ພຣະເຈົ້າສູງສົ່ງຕະຫຼອດໄປ ແລະ ສົມຄວນໄດ້ຮັບກຽດຕະຫຼອດໄປ, ໃນຂະນະທີ່ມະນຸດຕໍ່າຊ້າຕະຫຼອດໄປ, ໄຮ້ຄ່າຕະຫຼອດໄປ. ນີ້ກໍຍ້ອນວ່າ ພຣະເຈົ້າເສຍສະຫຼະຕະຫຼອດໄປ ແລະ ອຸທິດຕົວພຣະອົງເອງໃຫ້ກັບມະນຸດ; ເຖິງຢ່າງໃດກໍຕາມ ມະນຸດມີແຕ່ຮັບເອົາ ແລະ ພຽງແຕ່ອົດສູ້ເພື່ອຕົວເຂົາເອງເທົ່ານັ້ນ. ພຣະເຈົ້າຮັບເອົາຄວາມເຈັບປວດຕະຫຼອດໄປເພື່ອຄວາມຢູ່ລອດຂອງມະນຸດຊາດ ແຕ່ມະນຸດບໍ່ເຄີຍປະກອບສ່ວນຊ່ວຍຫຍັງເລີຍເພື່ອຜົນປະໂຫຍດແຫ່ງແສງສະຫວ່າງ ຫຼື ຄວາມຊອບທຳ. ເຖິງແມ່ນມະນຸດຈະພະຍາຍາມໃນຊ່ວງເວລາໃດໜຶ່ງ, ມັນກໍ່ບໍ່ສາມາດຕ້ານທານການໂຈມຕີແມ່ນແຕ່ຄັ້ງດຽວ ຍ້ອນຄວາມພະຍາຍາມຂອງມະນຸດແມ່ນເພື່ອຜົນປະໂຫຍດຂອງຕົວເຂົາເອງຢູ່ສະເໝີ ແລະບໍ່ແມ່ນເພື່ອຄົນອື່ນ. ມະນຸດເຫັນແກ່ໂຕຢູ່ສະເໝີ ໃນຂະນະທີ່ພຣະເຈົ້າເຫັນແກ່ຄົນອື່ນຕະຫຼອດໄປ. ພຣະເຈົ້າເປັນແຫຼ່ງກຳເນີດຂອງທຸກສິ່ງທີ່ຍຸຕິທຳ, ດີ ແລະ ສວຍງາມ, ໃນຂະນະທີ່ມະນຸດເປັນຄົນທີ່ສືບສານຕໍ່ ແລະ ເຮັດຄວາມຂີ້ຮ້າຍ ແລະ ສິ່ງຊົ່ວຮ້າຍທັງໝົດປາກົດແຈ້ງ. ພຣະເຈົ້າບໍ່ມີທາງປ່ຽນແປງແກ່ນແທ້ແຫ່ງຄວາມຊອບທຳ ແລະ ຄວາມສວຍງາມຂອງພຣະອົງ, ແຕ່ມະນຸດກໍຍັງສາມາດທໍລະຍົດຄວາມຊອບທຳຢ່າງບໍ່ຕ້ອງສົງໄສ ໃນທຸກເວລາ ແລະ ໃນທຸກສະຖານະການ ແລະ ຫຼົງທາງຫ່າງເຫີນຈາກພຣະເຈົ້າ.

ທຸກປະໂຫຍກທີ່ເຮົາໄດ້ກ່າວແມ່ນມີອຸປະນິໄສຂອງພຣະເຈົ້າຢູ່ໃນນັ້ນ. ພວກເຈົ້າຕ້ອງຕັ້ງໃຈໄຕ່ຕອງພຣະທຳຂອງເຮົາຢ່າງລະມັດລະວັງ ແລ້ວພວກເຈົ້າຈະໄດ້ຮັບຜົນປະໂຫຍດຢ່າງໃຫຍ່ຫຼວງຈາກພຣະທຳເຫຼົ່ານັ້ນຢ່າງແນ່ນອນ. ແກ່ນແທ້ຂອງພຣະເຈົ້າແມ່ນຍາກຫຼາຍທີ່ຈະເຂົ້າໃຈ ແຕ່ເຮົາເຊື່ອໝັ້ນວ່າຢ່າງໜ້ອຍ ພວກເຈົ້າທັງໝົດກໍມີຄວາມຄິດບາງຢ່າງກ່ຽວກັບອຸປະນິໄສຂອງພຣະເຈົ້າ. ແລ້ວເຮົາກໍຫວັງວ່າ ພວກເຈົ້າຕ້ອງສະແດງໃຫ້ເຮົາເຫັນສິ່ງຕ່າງໆທີ່ເຈົ້າໄດ້ເຮັດເຊິ່ງບໍ່ຜິດຕໍ່ອຸປະນິໄສຂອງພຣະເຈົ້າຫຼາຍຂຶ້ນ. ເມື່ອນັ້ນເຮົາກໍຈະໄດ້ໝັ້ນໃຈອີກເທື່ອໜຶ່ງ. ຕົວຢ່າງ ຈົ່ງຮັກສາພຣະເຈົ້າໃນຫົວໃຈຂອງເຈົ້າຢູ່ທຸກເວລາ. ໃນຕອນທີ່ເຈົ້າກະທຳກໍຈົ່ງເຮັດຕາມພຣະທຳຂອງພຣະອົງ. ຈົ່ງສະແຫວງຫາເຈດຕະນາຂອງພຣະອົງໃນທຸກສິ່ງຢ່າງ ແລະ ຈົ່ງລະເວັ້ນຈາກການກະທຳທີ່ບໍ່ເຄົາລົບ ແລະ ບໍ່ໃຫ້ກຽດພຣະເຈົ້າ. ຍິ່ງໄປກວ່ານັ້ນ ເຈົ້າບໍ່ຄວນວາງພຣະເຈົ້າໄວ້ຢູ່ດ້ານຫຼັງຈິດໃຈຂອງເຈົ້າເພື່ອເຕີມເຕັມອະນາຄົດທີ່ເປົ່າຫວ່າງໃນຫົວໃຈຂອງເຈົ້າ. ຖ້າເຈົ້າເຮັດແບບນີ້ ເຈົ້າກໍໄດ້ກະທຳຜິດຕໍ່ອຸປະນິໄສຂອງພຣະເຈົ້າແລ້ວ. ອີກຄັ້ງສົມມຸດວ່າ ເຈົ້າບໍ່ເຄີຍເຮັດການໝິ່ນປະໝາດ ຫຼື ກ່າວຕໍ່ວ່າພຣະເຈົ້າຕະຫຼອດຊີວິດຂອງເຈົ້າ ແລະອີກຄັ້ງ ສົມມຸດວ່າ ເຈົ້າສາມາດປະຕິບັດຕາມທຸກສິ່ງທີ່ພຣະອົງໄດ້ຝາກຝັງໃຫ້ກັບເຈົ້າຢ່າງເໝາະສົມແລະ ຍອມຢູ່ພາຍໃຕ້ພຣະທຳທຸກຂໍ້ຂອງພຣະອົງຕະຫຼອດຊີວິດຂອງເຈົ້າ ແລ້ວເຈົ້າກໍໄດ້ຫຼີກເວັ້ນຈາກການຝ່າຝືນບົດບັນຍັດແຫ່ງການຄຸ້ມຄອງແລ້ວ. ຕົວຢ່າງ ຖ້າເຈົ້າເຄີຍເວົ້າວ່າ "ເປັນຫຍັງຂ້ານ້ອຍຈຶ່ງບໍ່ຄິດວ່າ ພຣະອົງເປັນພຣະເຈົ້າ?" "ຂ້ານ້ອຍຄິດວ່າພຣະທຳເຫຼົ່ານີ້ເປັນພຽງຄວາມສະຫວ່າງບາງຢ່າງຂອງພຣະວິນຍານບໍລິສຸດ", "ໃນຄວາມຄິດເຫັນຂອງຂ້ານ້ອຍ ບໍ່ແມ່ນທຸກສິ່ງທີ່ພຣະເຈົ້າເຮັດແມ່ນຈຳເປັນຕ້ອງຖືກຕ້ອງ", "ຄວາມເປັນມະນຸດຂອງພຣະເຈົ້າກໍບໍ່ໄດ້ດີກວ່າຄວາມເປັນມະນຸດຂອງຂ້ານ້ອຍ",

"ພຣະທຳຂອງພຣະເຈົ້າບໍ່ເປັນຕາເຊື່ອແທ້ໆ" ຫຼື ຄຳເວົ້າທີ່ວິຈານອື່ນໆ, ແລ້ວເຮົາກໍຂໍຕັກເຕືອນໃຫ້ເຈົ້າຈົ່ງສາລະພາບ ແລະ ສຳນຶກຜິດໃນຄວາມບາບຂອງເຈົ້າໃຫ້ຫຼາຍຂຶ້ນ. ບໍ່ດັ່ງນັ້ນ ເຈົ້າຈະບໍ່ມີທາງໄດ້ຮັບໂອກາດແຫ່ງການອະໄພໂທດ ຍ້ອນເຈົ້າບໍ່ໄດ້ລ່ວງເກີນມະນຸດ ແຕ່ລ່ວງເກີນພຣະເຈົ້າເອງ. ເຈົ້າອາດເຊື່ອວ່າ ເຈົ້າກຳລັງຕັດສິນມະນຸດ ແຕ່ພຣະວິນຍານຂອງພຣະເຈົ້າບໍ່ໄດ້ຄິດແນວນັ້ນ. ການທີ່ເຈົ້າບໍ່ເຄົາລົບເນື້ອໜັງຂອງພຣະອົງກໍເທົ່າກັບການບໍ່ເຄົາລົບຕໍ່ພຣະອົງ. ເມື່ອເປັນແບບນີ້ ເຈົ້າບໍ່ໄດ້ກະທຳຜິດຕໍ່ອຸປະນິໄສຂອງພຣະເຈົ້າບໍ? ເຈົ້າຕ້ອງຈື່ວ່າ ທຸກສິ່ງທີ່ພຣະວິນຍານຂອງພຣະເຈົ້າປະຕິບັດກໍເພື່ອຮັກສາພາລະກິດຂອງພຣະອົງທີ່ຢູ່ໃນເນື້ອໜັງ ແລະ ເພື່ອເຮັດໃຫ້ພາລະກິດນີ້ໄດ້ຮັບປະຕິບັດຢ່າງຖືກຕ້ອງ. ຖ້າເຈົ້າບໍ່ເອົາໃຈໃສ່ໃນສິ່ງນີ້ ແລ້ວເຮົາກໍເວົ້າວ່າ ເຈົ້າເປັນຄົນທີ່ບໍ່ມີທາງປະສົບຜົນສຳເລັດໃນການເຊື່ອພຣະເຈົ້າຈັກເທື່ອ. ຍ້ອນເຈົ້າໄດ້ທ້າທາຍຄວາມໂກດຮ້າຍຂອງພຣະເຈົ້າ ສະນັ້ນ ພຣະອົງຈະນຳໃຊ້ການລົງໂທດທີ່ເໝາະສົມເພື່ອສັ່ງສອນບົດຮຽນໃຫ້ແກ່ເຈົ້າ.

ການຮຽນຮູ້ຈັກແກ່ນແທ້ຂອງພຣະເຈົ້າບໍ່ແມ່ນເລື່ອງທຳມະດາ. ເຈົ້າຕ້ອງເຂົ້າໃຈເຖິງອຸປະນິໄສຂອງພຣະອົງ. ດ້ວຍວິທີນີ້ ເຈົ້າຈະຮຽນຮູ້ຈັກແກ່ນແທ້ຂອງພຣະເຈົ້າເທື່ອລະໜ້ອຍ ແລະ ໂດຍບໍ່ຮູ້ຕົວ. ເມື່ອເຈົ້າໄດ້ເຂົ້າສູ່ຄວາມຮູ້ນີ້ແລ້ວ ເຈົ້າຈະພົບຕົນເອງກ້າວໄປຂ້າງໜ້າສູ່ພາວະທີ່ສູງກວ່າ ແລະ ສວຍງາມກວ່າ. ໃນທີ່ສຸດ ເຈົ້າຈະຮູ້ສຶກອັບອາຍກັບວິນຍານທີ່ໜ້າລັງກຽດຂອງເຈົ້າ ແລະ ຍິ່ງໄປກວ່ານັ້ນເຈົ້າຮູ້ສຶກວ່າ ບໍ່ມີບ່ອນໃຫ້ລີ້ຈາກຄວາມອັບອາຍຂອງເຈົ້າ. ໃນເວລານັ້ນ ຄວາມປະພຶດທີ່ເຈົ້າເຮັດຜິດຕໍ່ອຸປະນິໄສຂອງພຣະເຈົ້າຈະໜ້ອຍລົງໄປເລື້ອຍໆ, ຫົວໃຈຂອງເຈົ້າຈະຫຍັບເຂົ້າໃກ້ຊິດຫົວໃຈຂອງພຣະເຈົ້າ ແລະ ຄວາມຮັກທີ່ມີຕໍ່ພຣະອົງຈະເຕີບໃຫຍ່ໃນຫົວໃຈຂອງເຈົ້າເທື່ອລະໜ້ອຍ. ນີ້ຄືສັນຍານສະແດງເຖິງມະນຸດຊາດກຳລັງເຂົ້າສູ່ພາວະທີ່ສວຍງາມ. ແຕ່ພວກເຈົ້າກໍຍັງບໍ່ໄດ້ຮັບສິ່ງນີ້ເທື່ອ. ຍ້ອນພວກເຈົ້າທຸກຄົນວຸ້ນວາຍໄປມາເພື່ອເຫັນແກ່ໂຊກຊາຕາຂອງພວກເຈົ້າ ແມ່ນໃຜທີ່ຈະມີຄວາມສົນໃຈທີ່ຈະພະຍາຍາມຮູ້ຈັກເຖິງແກ່ນແທ້ຂອງພຣະເຈົ້າ? ຖ້າຍັງສືບຕໍ່ເປັນແບບນີ້ ພວກເຈົ້າກໍຈະຝ່າຝືນຕໍ່ບົດບັນຍັດແຫ່ງການຄຸ້ມຄອງຢ່າງບໍ່ຮູ້ຕົວ, ຍ້ອນພວກເຈົ້າເຂົ້າໃຈອຸປະນິໄສຂອງພຣະອົງພຽງໜ້ອຍເກີນໄປ. ສະນັ້ນສິ່ງທີ່ພວກເຈົ້າເຮັດໃນຕອນນີ້ບໍ່ແມ່ນເປັນການວາງພື້ນຖານສຳລັບການກະທຳຜິດຕໍ່ອຸປະນິໄສຂອງພຣະເຈົ້າບໍ? ການທີ່ເຮົາຂໍໃຫ້ພວກເຈົ້າເຂົ້າໃຈອຸປະນິໄສຂອງພຣະເຈົ້ານັ້ນບໍ່ແມ່ນການອອກຈາກພາລະກິດຂອງເຮົາ. ຍ້ອນວ່າ ຖ້າເຈົ້າຝ່າຝືນບົດບັນຍັດແຫ່ງການຄຸ້ມຄອງເລື້ອຍໆ ແລ້ວມີໃຜແດ່ໃນບັນດາພວກເຈົ້າຈະສາມາດຫຼົບຫຼີກຈາກການລົງໂທດໄດ້? ແລ້ວພາລະກິດຂອງເຮົາບໍ່ເປັນປະໂຫຍດທັງໝົດເລີຍບໍ? ສະນັ້ນ ເຮົາຈຶ່ງຍັງຂໍຮ້ອງວ່າ ນອກຈາກການພິຈາລະນາການປະພຶດຂອງພວກເຈົ້າເອງຢ່າງຖີ່ຖ້ວນແລ້ວ ພວກເຈົ້າຍັງຕ້ອງລະມັດລະວັງກັບບາດກ້າວທີ່ພວກເຈົ້າເດີນ. ນີ້ຄືສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າຫຼາຍກວ່າເກົ່າ ແລະ ເຮົາຫວັງວ່າ ພວກເຈົ້າຈະພິຈາລະນາມັນຢ່າງລະມັດລະວັງ ແລະເອົາໃຈໃສ່ແບບເອົາຈິງເອົາຈັງ. ເມື່ອຮອດມື້ທີ່ການກະທຳຂອງພວກເຈົ້າເຮັດໃຫ້ເຮົາໂກດຮ້າຍຢ່າງຮຸນແຮງ ແລ້ວຜົນຕາມມາຈະແມ່ນໃຫ້ພວກເຈົ້າພິຈາລະນາເອງ ແລະ ຈະບໍ່ມີໃຜເລີຍທີ່ແບກຮັບການລົງໂທດແທນພວກເຈົ້າໄດ້.

# ວິທີທີ່ຈະຮູ້ຈັກພຣະເຈົ້າເທິງແຜ່ນດິນໂລກ

ພວກເຈົ້າທຸກຄົນປາຖະໜາທີ່ຈະຮັບລາງວັນຕໍ່ໜ້າພຣະເຈົ້າ ແລະ ກາຍມາເປັນທີ່ພໍໃຈໂດຍພຣະອົງ; ທຸກຄົນປາຖະໜາຫາສິ່ງດັ່ງກ່າວ ເມື່ອພວກເຂົາເລີ່ມຕົ້ນເຊື່ອໃນພຣະເຈົ້າ ນັ້ນກໍຍ້ອນວ່າມະນຸດດົ້ນຮົນກັບການສະແຫວງຫາສິ່ງທີ່ສູງສົ່ງກວ່າ ແລະ ບໍ່ມີໃຜຕ້ອງການຖືກປະໄວ້ຢູ່ຫຼັງຄົນອື່ນ. ນີ້ຄືສິ່ງທີ່ຜູ້ຄົນເປັນ. ຍ້ອນເຫດຜົນນີ້ແທ້ໆ ຫຼາຍຄົນທີ່ຢູ່ທ່າມກາງພວກເຈົ້າຈຶ່ງພະຍາຍາມປະຈົບປະແຈງເພື່ອໃຫ້ພຣະເຈົ້າໃນສະຫວັນນິຍົມຊົມຊອບຕະຫຼອດເວລາ, ແຕ່ໃນຄວາມຈິງແລ້ວ ຄວາມຈົ່ງຮັກພັກດີ ແລະ ຄວາມຊື່ສັດທີ່ພວກເຈົ້າມີຕໍ່ພຣະເຈົ້ານັ້ນໜ້ອຍກວ່າຄວາມຈົ່ງຮັກພັກດີ ແລະ ຄວາມຊື່ສັດທີ່ພວກເຈົ້າມີຕໍ່ຕົນເອງອີກ. ເປັນຫຍັງເຮົາຈຶ່ງເວົ້າສິ່ງນີ້? ເພາະເຮົາບໍ່ຮັບຮູ້ຄວາມຊື່ສັດທີ່ພວກເຈົ້າມີຕໍ່ພຣະເຈົ້າເລີຍ ແລະ ຍິ່ງໄປກວ່ານັ້ນ ຍ້ອນເຮົາປະຕິເສດການເປັນຢູ່ຂອງພຣະເຈົ້າທີ່ມີຢູ່ໃນຫົວໃຈຂອງພວກເຈົ້າ. ນັ້ນໝາຍຄວາມວ່າ ພຣະເຈົ້າທີ່ພວກເຈົ້ານະມັດສະການ ເຊິ່ງເປັນພຣະເຈົ້າເລື່ອນລອຍທີ່ພວກເຈົ້າສັນລະເສີນນັ້ນ ບໍ່ມີຢູ່ຈິງເລີຍ. ເຫດຜົນທີ່ເຮົາສາມາດເວົ້າສິ່ງນີ້ໄດ້ຢ່າງແນ່ນອນກໍເພາະວ່າ ພວກເຈົ້າຫ່າງໄກຈາກພຣະເຈົ້າທີ່ເປັນຈິງຫຼາຍ. ເຫດຜົນສຳລັບຄວາມຊື່ສັດຂອງພວກເຈົ້າແມ່ນຮູບບູຊາທີ່ຢູ່ພາຍໃນຫົວໃຈຂອງພວກເຈົ້າ; ແຕ່ໃນຂະນະດຽວກັນ ສຳລັບເຮົາແລ້ວ ພຣະເຈົ້າທີ່ພວກເຈົ້າເບິ່ງຄືວ່າບໍ່ຍິ່ງໃຫຍ່ ຫຼື ເລັກນ້ອຍ, ພວກເຈົ້າພຽງແຕ່ຮັບຮູ້ເຮົາດ້ວຍຄຳເວົ້າເທົ່ານັ້ນ. ເມື່ອເຮົາເວົ້າວ່າພວກເຈົ້າຫ່າງເຫີນຈາກພຣະເຈົ້າຫຼາຍນັ້ນ ເຮົາໝາຍຄວາມວ່າພວກເຈົ້າໄດ້ຫ່າງໄກຈາກພຣະເຈົ້າທີ່ແທ້ຈິງ, ໃນຂະນະທີ່ພຣະເຈົ້າທີ່ເລື່ອນລອຍເບິ່ງຄືວ່າໃກ້ໂຕພວກເຈົ້າ. ເມື່ອເຮົາເວົ້າວ່າ "ບໍ່ຍິ່ງໃຫຍ່" ມັນແມ່ນເວົ້າເຖິງວິທີການທີ່ພຣະເຈົ້າທີ່ພວກເຈົ້າເຊື່ອໃນປັດຈຸບັນນີ້ເບິ່ງຄືວ່າເປັນພຽງແຕ່ມະນຸດທີ່ປາສະຈາກຄວາມສາມາດທີ່ຍິ່ງໃຫຍ່, ເປັນມະນຸດທີ່ບໍ່ສູງສົ່ງ. ເມື່ອເຮົາເວົ້າວ່າ "ບໍ່ນ້ອຍ", ສິ່ງນີ້ໝາຍຄວາມວ່າ ເຖິງແມ່ນວ່າມະນຸດຄົນນີ້ບໍ່ສາມາດເອີ້ນລົມ ແລະ ຄວບຄຸມຝົນ, ເຖິງຢ່າງໃດກໍຕາມ ພຣະອົງສາມາດເອີ້ນຫາພຣະວິນຍານຂອງພຣະເຈົ້າໃຫ້ປະຕິບັດພາລະກິດທີ່ສັ່ນສະເທືອນສະຫວັນ ແລະ ແຜ່ນດິນໂລກໄດ້ ເຊິ່ງເຮັດໃຫ້ມະນຸດອັດສະຈັນໃຈຢ່າງສິ້ນເຊີງ. ຢູ່ພາຍນອກ ພວກເຈົ້າທັງໝົດເບິ່ງຄືກັບວ່າ ເຊື່ອຟັງພຣະຄຣິດນີ້ຢູ່ເທິງແຜ່ນດິນໂລກຢ່າງສູງ ແຕ່ໃນແກ່ນແທ້ແລ້ວ ພວກເຈົ້າບໍ່ໄດ້ມີຄວາມເຊື່ອໃນພຣະອົງ ຫຼື ພວກເຈົ້າບໍ່ໄດ້ຮັກພຣະອົງເລີຍ. ນັ້ນໝາຍຄວາມວ່າ ຄົນທີ່ພວກເຈົ້າເຊື່ອແມ່ນພຣະເຈົ້າເລື່ອນລອຍທີ່ມາຈາກຄວາມຮູ້ສຶກຂອງພວກເຈົ້າເອງ ແລະ ຄົນທີ່ພວກເຈົ້າຮັກຢ່າງແທ້ຈິງແມ່ນພຣະເຈົ້າທີ່ພວກເຈົ້າປາຖະໜາທັງໃນກາງຄືນ ແລະ ກາງເວັນ ແຕ່ບໍ່ເຄີຍເຫັນດ້ວຍຕົນເອງ. ສຳລັບພຣະຄຣິດນີ້ ຄວາມເຊື່ອຂອງພວກເຈົ້າເປັນພຽງແຕ່ເສດສ່ວນເຫຼືອເທົ່ານັ້ນ ແລະ ຄວາມຮັກຂອງພວກເຈົ້າບໍ່ມີເລີຍ. ຄວາມເຊື່ອໝາຍເຖິງຄວາມສັດທາ ແລະ ຄວາມໄວ້ວາງໃຈ; ຄວາມຮັກໝາຍເຖິງຄວາມເຄົາລົບ ແລະ ຄວາມນັບຖືທີ່ຢູ່ໃນຫົວໃຈ ເຊິ່ງບໍ່ເຄີຍຈາງຫາຍ. ແຕ່ຄວາມເຊື່ອ ແລະ ຄວາມຮັກທີ່ພວກເຈົ້າມີຕໍ່ພຣະຄຣິດໃນປັດຈຸບັນແມ່ນບໍ່ເປັນໄປຕາມທີ່ຄາດຫວັງໄວ້ຫຼາຍ. ເມື່ອເວົ້າເຖິງຄວາມເຊື່ອ ພວກເຈົ້າແມ່ນມີຄວາມເຊື່ອແນວໃດໃນພຣະອົງ? ເມື່ອເວົ້າເຖິງຄວາມຮັກ ພວກເຈົ້າຮັກພຣະອົງດ້ວຍ

ວິທີໃດ? ພວກເຈົ້າບໍ່ມີຄວາມເຂົ້າໃຈກ່ຽວກັບອຸປະນິໄສຂອງພຣະເຈົ້າແມ່ນແຕ່ໜ້ອຍດຽວ, ແຮງໄກທີ່ພວກເຈົ້າຈະຮູ້ຈັກແກ່ນແທ້ຂອງພຣະອົງ, ແລ້ວພວກເຈົ້າຈະມີຄວາມເຊື່ອແນວໃດໃນພຣະອົງ? ຄວາມເປັນຈິງແຫ່ງຄວາມເຊື່ອທີ່ພວກເຈົ້າມີຕໍ່ພຣະເຈົ້າແມ່ນຢູ່ໃສ? ພວກເຈົ້າຮັກພຣະອົງແນວໃດ? ຄວາມເປັນຈິງແຫ່ງຄວາມຮັກທີ່ພວກເຈົ້າມີຕໍ່ພຣະອົງຢູ່ໃສ?

ຫຼາຍຄົນໄດ້ຕິດຕາມເຮົາໂດຍບໍ່ມີຄວາມລັງເລໃຈຈົນຮອດປັດຈຸບັນ. ແລ້ວພວກເຈົ້າໄດ້ທົນທຸກຕໍ່ຄວາມອ່ອນເພຍຢ່າງຫຼວງຫຼາຍໃນຊ່ວງເວລາສອງສາມປີທີ່ຜ່ານມາ. ລັກສະນະທີ່ມີມາຕັ້ງແຕ່ເກີດ ແລະ ນິໄສຂອງພວກເຈົ້າແຕ່ລະຄົນນັ້ນ ເຮົາໄດ້ເຂົ້າໃຈຢ່າງຊັດເຈນ; ການມີປະຕິກິລິຍາກັບພວກເຈົ້າທຸກຄົນເປັນເລື່ອງທີ່ຍາກລຳບາກຫຼາຍ. ເລື່ອງທີ່ເປັນຕາເສຍດາຍກໍຄື ເຖິງແມ່ນວ່າເຮົາໄດ້ຮັບຂໍ້ມູນຫຼາຍຢ່າງກ່ຽວກັບພວກເຈົ້າ, ພວກເຈົ້າກໍບໍ່ມີຄວາມເຂົ້າໃຈຫຍັງກ່ຽວກັບເຮົາ. ບໍ່ແປກໃຈເລີຍທີ່ຜູ້ຄົນເວົ້າວ່າ ພວກເຈົ້າຖືກຄົນຫຼອກຕົ້ມໃນຊ່ວງເວລາແຫ່ງຄວາມສັບສົນ. ແນ່ນອນ ພວກເຈົ້າບໍ່ເຂົ້າໃຈຫຍັງກ່ຽວກັບອຸປະນິໄສຂອງເຮົາ, ແຮງໄກທີ່ພວກເຈົ້າຈະສາມາດຢັ່ງເຖິງສິ່ງທີ່ຢູ່ໃນຈິດໃຈຂອງເຮົາເລີຍ. ມື້ນີ້ ຄວາມເຂົ້າໃຈຜິດຂອງພວກເຈົ້າກ່ຽວກັບເຮົາແມ່ນເພີ່ມທະວີຂຶ້ນເລື້ອຍໆ ແລະ ຄວາມເຊື່ອທີ່ພວກເຈົ້າມີຕໍ່ເຮົາກໍຍັງຄົງເປັນຄວາມເຊື່ອທີ່ສັບສົນ. ແທນທີ່ຈະເວົ້າວ່າ ພວກເຈົ້າມີຄວາມເຊື່ອໃນຕົວເຮົາ, ມັນຈະຊຳນານກວ່າທີ່ຈະເວົ້າວ່າພວກເຈົ້າທຸກຄົນກຳລັງພະຍາຍາມປະຈົບປະແຈງເຮົາ ແລະ ລູບແຂ່ງເລຍຂາເຮົາ. ແຮງຈູງໃຈຂອງພວກເຈົ້າແມ່ນງ່າຍຫຼາຍ: ຂ້ານ້ອຍຈະຕິດຕາມໃຜກໍຕາມທີ່ສາມາດໃຫ້ລາງວັນແກ່ຂ້ານ້ອຍໄດ້ ແລະ ຂ້ານ້ອຍຈະເຊື່ອໃນໃຜກໍຕາມທີ່ສາມາດເຮັດໃຫ້ຂ້ານ້ອຍຫຼີບຫຼີກຄວາມພິນາດທີ່ຍິ່ງໃຫຍ່ໄດ້ ບໍ່ວ່າຜູ້ນັ້ນຈະເປັນພຣະເຈົ້າ ຫຼື ພຣະເຈົ້າອົງໃດກໍຕາມ. ຂ້ານ້ອຍບໍ່ສົນໃນສິ່ງນີ້ເລີຍ. ມີຫຼາຍຄົນແບບນັ້ນທ່າມກາງພວກເຈົ້າມີເຈດຕະນາ ແລະ ສະພາບການແບບນີ້ແມ່ນຮ້າຍແຮງຫຼາຍ. ຖ້າມື້ໜຶ່ງ ມີການທົດລອງຂຶ້ນເພື່ອເບິ່ງວ່າ ຈະມີພວກເຈົ້າເທົ່າໃດຄົນທີ່ມີຄວາມເຊື່ອໃນພຣະຄຣິດຍ້ອນຄວາມເຂົ້າໃຈໃນແກ່ນແທ້ຂອງພຣະອົງ, ແລ້ວເຮົາກໍຢ້ານວ່າ ບໍ່ມີພວກເຈົ້າຈັກຄົນເລີຍທີ່ສາມາດພໍໃຈເຮົາໄດ້. ສະນັ້ນ ມັນກໍຄົງບໍ່ເສຍຫາຍຫຍັງທີ່ພວກເຈົ້າທຸກຄົນຈະພິຈາລະນາຄຳຖາມນີ້: ພຣະເຈົ້າທີ່ພວກເຈົ້າມີຄວາມເຊື່ອນີ້ແມ່ນແຕກຕ່າງຈາກເຮົາຢ່າງໃຫຍ່ຫຼວງ ແລະ ເມື່ອເປັນແບບນີ້ແລ້ວ ແມ່ນຫຍັງຄືແກ່ນແທ້ຂອງຄວາມເຊື່ອທີ່ພວກເຈົ້າມີຕໍ່ພຣະເຈົ້າ? ຍິ່ງພວກເຈົ້າເຊື່ອໃນສິ່ງທີ່ເອີ້ນວ່າເປັນພຣະເຈົ້າຂອງພວກເຈົ້າຫຼາຍສໍ່າໃດ ພວກເຈົ້າຍິ່ງຫ່າງເຫີນອອກຈາກເຮົາໄປໄກຫຼາຍສໍ່ານັ້ນ. ແລ້ວແມ່ນຫຍັງຄືແກ່ນແທ້ຂອງບັນຫານີ້? ມັນແນ່ນອນແລ້ວວ່າ ພວກເຈົ້າບໍ່ມີຄົນໃດທີ່ເຄີຍພິຈາລະນາຄຳຖາມດັ່ງກ່າວ, ແຕ່ແຮງໂນ້ມທວງຂອງມັນໄດ້ເກີດຂຶ້ນກັບພວກເຈົ້າບໍ? ພວກເຈົ້າເຄີຍຄິດກ່ຽວກັບຜົນຕາມມາຂອງການສືບຕໍ່ເຊື່ອໃນຮູບແບບນີ້ບໍ?

ມື້ນີ້ ພວກເຈົ້າປະສົບກັບຫຼາຍບັນຫາ ແລະ ບໍ່ມີຄົນໃດທີ່ຊຳນານໃນການແກ້ບັນຫາເຫຼົ່ານີ້. ຖ້າສືບຕໍ່ເປັນແບບນີ້ ຄົນທີ່ຈະຢືນສູນເສຍກໍຈະມີແຕ່ພວກເຈົ້າເອງເທົ່ານັ້ນ. ເຮົາຈະຊ່ວຍໃຫ້ພວກເຈົ້າລະບຸບັນຫາໄດ້ ແຕ່ການແກ້ໄຂບັນຫາແມ່ນຂຶ້ນຢູ່ກັບພວກເຈົ້າ.

ເຮົາພໍໃຈໃນຄົນທີ່ບໍ່ມີຄວາມສົງໄສກ່ຽວກັບຄົນອື່ນ ແລະ ເຮົາມັກຄົນທີ່ຍອມຮັບຄວາມຈິງດ້ວຍ

ຄວາມເຕັມໃຈ; ສຳລັບມະນຸດສອງປະເພດນີ້ ເຮົາສະແດງຄວາມຫ່ວງໃຍຢ່າງໃຫຍ່ຫຼວງ ຍ້ອນໃນສາຍຕາຂອງເຮົາ ພວກເຂົາເປັນມະນຸດທີ່ຊື່ສັດ. ຖ້າເຈົ້າເປັນຄົນຫຼອກລວງ ແລ້ວເຈົ້າກໍຈະມີຫົວໃຈທີ່ບໍ່ເຊື່ອໃຜ ແລະ ສົງໄສຕໍ່ທຸກຄົນ ແລະ ທຸກເລື່ອງ ແລະ ດ້ວຍເຫດນັ້ນ ຄວາມເຊື່ອທີ່ເຈົ້າມີຕໍ່ເຮົາແມ່ນເກີດຂຶ້ນເທິງພື້ນຖານຂອງຄວາມສົງໄສ. ເຮົາບໍ່ສາມາດຮັບຮູ້ຄວາມເຊື່ອດັ່ງກ່າວໄດ້. ການຂາດຄວາມເຊື່ອທີ່ແທ້ຈິງ ເຈົ້າກໍຈະຍິ່ງປາສະຈາກຄວາມຮັກທີ່ແທ້ຈິງ. ແລ້ວຖ້າເຈົ້າສາມາດສົງໄສພຣະເຈົ້າ ແລະ ຄາດເດົາກ່ຽວກັບພຣະອົງຕາມໃຈມັກ ແລ້ວເຈົ້າກໍເປັນຄົນທີ່ຫຼອກລວງທີ່ສຸດຢ່າງບໍ່ຕ້ອງສົງໄສ. ເຈົ້າຄາດຄະເນວ່າ ພຣະເຈົ້າສາມາດເປັນຄືກັບມະນຸດໄດ້ ຫຼື ບໍ່: ນັ້ນ ຄືຄວາມຜິດບາບທີ່ຍົກໂທດໃຫ້ບໍ່ໄດ້, ເປັນຄົນທີ່ມີບຸກຄະລິກຕໍ່າ, ປາສະຈາກຄວາມຍຸຕິທຳ ແລະ ເຫດຜົນ, ຂາດຄວາມສຳນຶກແຫ່ງຄວາມຊອບທຳ, ຕົກຢູ່ໃນກົນລະຍຸດທີ່ຊົ່ວຊ້າ, ມີເລ່ລ່ຽມ ແລະ ສະຫຼາດແກມໂກງ, ເປັນທີ່ພໍໃຈຂອງສິ່ງຊົ່ວຮ້າຍ ແລະ ຄວາມມືດມົນ ແລະ ອື່ນໆອີກ. ເຫດຜົນທີ່ມະນຸດມີຄວາມຄິດດັ່ງກ່າວບໍ່ແມ່ນຍ້ອນມະນຸດບໍ່ມີຄວາມຮູ້ແມ່ນແຕ່ໜ້ອຍດຽວກ່ຽວກັບພຣະເຈົ້າບໍ? ຄວາມເຊື່ອປະເພດນີ້ບໍ່ມີຫຍັງນອກຈາກຄວາມຜິດບາບ! ເຖິງກັບມີບາງຄົນທີ່ເຊື່ອວ່າ ຄົນທີ່ເຮັດໃຫ້ເຮົາພໍໃຈແມ່ນຄົນປະຈົບປະແຈງ ແລະ ຄົນລູບແຂ່ງເລຍຂາແທ້ໆ ແລະ ຄົນທີ່ບໍ່ມີທັກສະດັ່ງກ່າວກໍຈະບໍ່ຖືກຕ້ອນຮັບໃນເຮືອນຂອງພຣະເຈົ້າ ແລະ ຈະສູນເສຍຕຳແໜ່ງຂອງພວກເຂົາໃນທີ່ນັ້ນ. ສິ່ງນີ້ແມ່ນຄວາມຮູ້ທັງໝົດທີ່ພວກເຈົ້າໄດ້ຮັບຫຼັງຈາກຊ່ວງເວລາທີ່ຜ່ານມາບໍ? ນີ້ແມ່ນສິ່ງທີ່ພວກເຈົ້າໄດ້ຮັບບໍ? ແລ້ວຄວາມຮູ້ຂອງພວກເຈົ້າທີ່ກ່ຽວກັບເຮົາບໍ່ໄດ້ຢຸດຕິລົງພຽງທີ່ຄວາມເຂົ້າໃຈຜິດເຫຼົ່ານີ້; ຮ້າຍແຮງໄປກວ່ານັ້ນກໍຄືການໝິ່ນປະໝາດທີ່ພວກເຈົ້າມີຕໍ່ພຣະວິນຍານຂອງພຣະເຈົ້າ ແລະ ການປະນາມສະຫວັນ. ນີ້ຄືເຫດຜົນທີ່ເຮົາເວົ້າວ່າ ຄວາມເຊື່ອປະເພດດັ່ງກ່າວຂອງພວກເຈົ້າຈະພຽງແຕ່ເຮັດໃຫ້ພວກເຈົ້າຫ່າງເຫີນຈາກເຮົາ ແລະ ຕໍ່ຕ້ານເຮົາຫຼາຍຍິ່ງຂຶ້ນ. ຕະຫຼອດເວລາຫຼາຍປີຂອງການປະຕິບັດພາລະກິດ ພວກເຈົ້າໄດ້ເຫັນຄວາມຈິງຫຼາຍຢ່າງ ແຕ່ພວກເຈົ້າຮູ້ບໍວ່າ ຫູຂອງເຮົາໄດ້ຍິນຫຍັງແດ່? ມີພວກເຈົ້າຈັກຄົນທີ່ເຕັມໃຈຍອມຮັບເອົາຄວາມຈິງ? ພວກເຈົ້າທຸກຄົນເຊື່ອວ່າ ພວກເຈົ້າເຕັມໃຈທີ່ຊຳລະລາຄາເພື່ອຄວາມຈິງ ແຕ່ມີຈັກຄົນທີ່ໄດ້ທົນທຸກເພື່ອຄວາມຈິງແທ້ໆ? ບໍ່ມີຫຍັງນອກຈາກຄວາມບໍ່ຊອບທຳທີ່ຢູ່ໃນຫົວໃຈຂອງພວກເຈົ້າ ເຊິ່ງເຮັດໃຫ້ພວກເຈົ້າຄິດວ່າ ບໍ່ວ່າພວກເຂົາຈະເປັນໃຜກໍຕາມ ທຸກຄົນຫຼອກລວງ ແລະ ບໍ່ສັດຊື່ສໍ່າໆກັນ ຈົນເຖິງຈຸດທີ່ເຈົ້າເຖິງກັບເຊື່ອວ່າ ພຣະເຈົ້າທີ່ບັງເກີດເປັນມະນຸດແມ່ນປາສະຈາກຫົວໃຈເມດຕາ ຫຼື ຄວາມຮັກກະລຸນາຄືກັບມະນຸດປົກກະຕິ. ຍິ່ງໄປກວ່ານັ້ນ ພວກເຈົ້າເຊື່ອວ່າ ລັກສະນະທີ່ສູງສົ່ງ ແລະ ທຳມະຊາດທີ່ເມດຕາ ແລະ ກະລຸນາມີຢູ່ພຽງແຕ່ພາຍໃນພຣະເຈົ້າທີ່ຢູ່ໃນສະຫວັນເທົ່ານັ້ນ. ພວກເຈົ້າເຊື່ອວ່າ ນັກບຸນດັ່ງກ່າວບໍ່ມີຢູ່ຈິງ ແລະ ມີພຽງແຕ່ຄວາມມືດ ແລະ ການປົກຄອງທີ່ຊົ່ວຮ້າຍທີ່ແຜ່ນດິນໂລກ ໃນຂະນະທີ່ພຣະເຈົ້າແມ່ນບາງສິ່ງທີ່ມະນຸດຝາກຝັງຄວາມປາຖະໜາຂອງພວກເຂົາສຳລັບສິ່ງທີ່ດີ ແລະ ສວຍງາມ, ເປັນບຸກຄົນທີ່ມີຊື່ລືຊາທີ່ປັ້ນແຕ່ງຂຶ້ນມາໂດຍມະນຸດ. ໃນຈິດໃຈຂອງພວກເຈົ້າ ພຣະເຈົ້າທີ່ຢູ່ໃນສະຫວັນແມ່ນຊື່ສັດ, ຊອບທຳ ແລະ ຍິ່ງໃຫຍ່ຫຼາຍ ເຊິ່ງສົມຄວນແກ່ການນະມັດສະການ ແລະ ການເຄົາລົບບູຊາ; ແຕ່ໃນຂະນະດຽວກັນ ພຣະເຈົ້ານີ້ທີ່ຢູ່ເທິງແຜ່ນດິນໂລກເປັນພຽງຕົວສຳຮອງ

ແລະ ເປັນເຄື່ອງມືຂອງພຣະເຈົ້າທີ່ຢູ່ໃນສະຫວັນ. ພວກເຈົ້າເຊື່ອວ່າ ພຣະເຈົ້າອົງນີ້ບໍ່ສາມາດທຽບເທົ່າກັບພຣະເຈົ້າທີ່ຢູ່ໃນສະຫວັນ ແຮງໄກທີ່ຈະຖືກກ່າວເຖິງໃນລັກສະນະດຽວກັນກັບພຣະອົງ. ເມື່ອເວົ້າເຖິງຄວາມຍິ່ງໃຫຍ່ ແລະ ກຽດສັກສີຂອງພຣະເຈົ້າ, ສິ່ງເຫຼົ່ານີ້ເປັນຂອງສະຫງ່າລາສີຂອງພຣະເຈົ້າທີ່ຢູ່ໃນສະຫວັນ ແຕ່ເມື່ອເວົ້າເຖິງທຳມະຊາດ ແລະ ຄວາມເສື່ອມຊາມຂອງມະນຸດ ສິ່ງເຫຼົ່ານີ້ແມ່ນຄຸນສົມບັດເຊິ່ງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກມີສ່ວນ. ພຣະເຈົ້າທີ່ຢູ່ໃນສະຫວັນເປັນຕານັບຖືຕະຫຼອດໄປ ໃນຂະນະທີ່ພຣະເຈົ້າເທິງແຜ່ນດິນໂລກບໍ່ສຳຄັນ, ອ່ອນແອ ແລະ ບໍ່ມີຄວາມສາມາດຕະຫຼອດໄປ. ພຣະເຈົ້າທີ່ຢູ່ໃນສະຫວັນບໍ່ມີຄວາມຮູ້ສຶກນຶກຄິດຢ່າງອື່ນ ມີແຕ່ຄວາມຊອບທຳເທົ່ານັ້ນ ໃນຂະນະທີ່ພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກມີແຮງຈູງໃຈເຫັນແກ່ຕົວ ແລະ ປາສະຈາກຄວາມຍຸຕິທຳ ຫຼື ເຫດຜົນ. ພຣະເຈົ້າທີ່ຢູ່ໃນສະຫວັນບໍ່ມີຄວາມຄົດໂກງແມ່ນແຕ່ໜ້ອຍດຽວ ແລະ ຊື່ສັດຕະຫຼອດໄປ ໃນຂະນະທີ່ພຣະເຈົ້າຢູ່ເທິງແຜ່ນດິນໂລກມີດ້ານທີ່ບໍ່ຊື່ສັດຢູ່ສະເໝີ. ພຣະເຈົ້າທີ່ຢູ່ໃນສະຫວັນຮັກມະນຸດຫຼາຍໃນຂະນະທີ່ພຣະເຈົ້າເທິງແຜ່ນດິນໂລກສະແດງຄວາມຫ່ວງໃຍຕໍ່ມະນຸດເຊິ່ງກໍບໍ່ພຽງພໍ, ເຖິງກັບເມີນເສີຍຕໍ່ເຂົາຢ່າງສິ້ນເຊີງ. ຄວາມຮູ້ທີ່ຜິດນີ້ຖືກເກັບຮັກສາໄວ້ພາຍໃນຫົວໃຈຂອງພວກເຈົ້າເປັນເວລາດົນນານມາແລ້ວ ແລະ ອາດຝັງຢູ່ໃນຫົວໃຈພວກເຈົ້າໃນອະນາຄົດ. ພວກເຈົ້າເຫັນວ່າທຸກການກະທຳຂອງພຣະຄຣິດແມ່ນມາຈາກຈຸດຢືນຂອງຄົນທີ່ບໍ່ຊອບທຳ ແລະ ປະເມີນພາລະກິດທັງໝົດຂອງພຣະອົງພ້ອມທັງຕົວຕົນ ແລະ ແກ່ນແທ້ຂອງພຣະອົງຈາກທັດສະນະຂອງຄົນທີ່ຊົ່ວຮ້າຍ. ພວກເຈົ້າໄດ້ສ້າງຄວາມຜິດພາດຢ່າງຮ້າຍແຮງ ແລະ ເຮັດໃນສິ່ງທີ່ບໍ່ມີຄົນໃດທີ່ມາກ່ອນໜ້າພວກເຈົ້ານັ້ນເຄີຍເຮັດມາກ່ອນເລີຍ. ນັ້ນກໍຄື ພວກເຈົ້າພຽງແຕ່ຮັບໃຊ້ພຣະເຈົ້າທີ່ເປັນຕານັບຖືໃນສະຫວັນທີ່ມີມົງກຸດປະທັບຢູ່ເທິງຫົວຂອງພຣະອົງ ແລະ ບໍ່ສົນໃຈກັບພຣະເຈົ້າທີ່ພວກເຈົ້າເຫັນວ່າບໍ່ສຳຄັນ ຄືກັບວ່າພຣະອົງບໍ່ມີຕົວຕົນຕໍ່ພວກເຈົ້າເລີຍ. ນີ້ບໍ່ແມ່ນຄວາມບາບຂອງພວກເຈົ້າບໍ? ນີ້ບໍ່ແມ່ນຕົວຢ່າງເດັ່ນໃນການເຮັດຜິດຂອງພວກເຈົ້າຕໍ່ອຸປະນິໄສຂອງພຣະເຈົ້າບໍ? ພວກເຈົ້ານະມັດສະການພຣະເຈົ້າທີ່ຢູ່ໃນສະຫວັນ. ພວກເຈົ້າເຄົາລົບຮູບພາບທີ່ສູງສົ່ງ ແລະ ນັບຖືຄົນທີ່ມີຊື່ສຽງຍ້ອນຄຳເວົ້າທີ່ຈັບໃຈຂອງພວກເຂົາ. ເຈົ້າຍິນດີຖືກບັນຊາໂດຍພຣະເຈົ້າທີ່ເຮັດໃຫ້ມືຂອງເຈົ້າເຕັມໄປດ້ວຍຄວາມລ້ຳລວຍ ແລະ ປາຖະໜາຫາພຣະເຈົ້າທີ່ສາມາດສະໜອງຄວາມປາຖະໜາທຸກຢ່າງຂອງເຈົ້າທຸກຢ່າງ. ພຣະເຈົ້າອົງດຽວທີ່ເຈົ້າບໍ່ນະມັດສະການນັ້ນກໍຄືພຣະເຈົ້າອົງນີ້ທີ່ບໍ່ເປັນຕາສູງສົ່ງ; ສິ່ງດຽວທີ່ເຈົ້າກຽດຊັງກໍຄືການກ່ຽວພັນກັບພຣະເຈົ້າອົງນີ້ ຜູ້ເຊິ່ງບໍ່ມີມະນຸດຄົນໃດເຫັນວ່າສູງສົ່ງ. ສິ່ງດຽວທີ່ເຈົ້າບໍ່ເຕັມໃຈກໍຄືຮັບໃຊ້ພຣະເຈົ້າທີ່ບໍ່ເຄີຍມອບເງິນແມ່ນແຕ່ກີບດຽວໃຫ້ເຈົ້າ ແລະ ພຣະເຈົ້າອົງດຽວທີ່ບໍ່ສາມາດເຮັດໃຫ້ເຈົ້າປາຖະໜາຫາພຣະອົງ ກໍຄືພຣະເຈົ້າທີ່ບໍ່ເປັນຕາຮັກອົງນີ້. ພຣະເຈົ້ານີ້ບໍ່ສາມາດເຮັດໃຫ້ເຈົ້າເປີດມຸມມອງຂອງເຈົ້າອອກຢ່າງກວ້າງຂວາງໄດ້, ບໍ່ສາມາດເຮັດໃຫ້ເຈົ້າຮູ້ສຶກວ່າ ເຈົ້າໄດ້ພົບຊັບສົມບັດ ແຮງໄກທີ່ຈະສະໜອງສິ່ງທີ່ເຈົ້າປາຖະໜາ. ແລ້ວເປັນຫຍັງເຈົ້າຈຶ່ງຕິດຕາມພຣະອົງ? ເຈົ້າເຄີຍຄິດໃນຄຳຖາມແບບນີ້ບໍ? ສິ່ງທີ່ເຈົ້າເຮັດບໍ່ພຽງແຕ່ເຮັດຜິດຕໍ່ພຣະຄຣິດອົງນີ້ເທົ່ານັ້ນ; ທີ່ສຳຄັນໄປກວ່ານັ້ນ ມັນຍັງເຮັດຜິດຕໍ່ພຣະເຈົ້າທີ່ຢູ່ໃນສະຫວັນອີກ. ເຮົາຄິດວ່າ ນີ້ບໍ່ແມ່ນຈຸດປະສົງຂອງຄວາມເຊື່ອທີ່ພວກເຈົ້າມີຕໍ່ພຣະເຈົ້າ!

ພວກເຈົ້າປາຖະໜາທີ່ຈະໃຫ້ພຣະເຈົ້າພໍໃຈໃນຕົວພວກເຈົ້າ ແຕ່ພວກເຈົ້າຫ່າງເຫີນຈາກພຣະເຈົ້າຫຼາຍ. ແມ່ນຫຍັງຄືບັນຫາໃນທີ່ນີ້? ພວກເຈົ້າຍອມຮັບພຽງແຕ່ພຣະທຳຂອງພຣະອົງ ແຕ່ບໍ່ຮັບການຈັດການຂອງພຣະອົງ ຫຼື ການລິຮານຂອງພຣະອົງ; ແຮງໄກທີ່ພວກເຈົ້າບໍ່ສາມາດຍອມຮັບເອົາການຈັດແຈງທຸກຢ່າງຂອງພຣະອົງ, ເພື່ອມີຄວາມເຊື່ອທີ່ສົມບູນໃນພຣະອົງ. ແລ້ວແມ່ນຫຍັງຄືບັນຫາໃນທີ່ນີ້? ໃນການວິເຄາະຄັ້ງສຸດທ້າຍ, ຄວາມເຊື່ອຂອງພວກເຈົ້າແມ່ນເປັນພຽງເປືອກໄຂ່ທີ່ວ່າງເປົ່າ ທີ່ບໍ່ສາມາດໃຫ້ກຳເນີດລູກໄກ່ໄດ້. ຍ້ອນຄວາມເຊື່ອຂອງພວກເຈົ້າຍັງບໍ່ໄດ້ນຳເອົາຄວາມຈິງມາສູ່ພວກເຈົ້າ ຫຼື ເຮັດໃຫ້ພວກເຈົ້າໄດ້ຮັບຊີວິດ ແຕ່ກົງກັນຂ້າມ ຄວາມເຊື່ອນັ້ນໄດ້ນຳຄວາມຮູ້ສຶກລວງຕາເຖິງການບຳລຸງລ້ຽງ ແລະ ຄວາມຫວັງມາສູ່ຊີວິດຂອງພວກເຈົ້າ. ມັນຄືຄວາມຮູ້ສຶກເຖິງການບຳລຸງລ້ຽງ ແລະ ຄວາມຫວັງນີ້ທີ່ເປັນຈຸດປະສົງຂອງພວກເຈົ້າໃນການເຊື່ອໃນພຣະເຈົ້າບໍ່ແມ່ນຄວາມຈິງ ແລະ ຊີວິດ. ສະນັ້ນ ເຮົາຈຶ່ງເວົ້າວ່າ ແນວທາງປະຕິບັດໃນຄວາມເຊື່ອຂອງພວກເຈົ້າຕໍ່ພຣະເຈົ້ານັ້ນເປັນພຽງການພະຍາຍາມປະຈົບປະແຈງພຣະເຈົ້າຜ່ານການຍອມຮັບໃຊ້ ແລະ ຄວາມໄຮ້ຢາງອາຍ ແລະ ບໍ່ສາມາດຖືວ່າເປັນຄວາມເຊື່ອທີ່ແທ້ຈິງໄດ້ ບໍ່ວ່າໃນວິທີທາງໃດກໍຕາມ. ລູກໄກ່ຈະສາມາດປາກົດອອກຈາກຄວາມເຊື່ອແບບນີ້ໄດ້ແນວໃດ? ເວົ້າອີກແບບໜຶ່ງກໍຄື ຄວາມເຊື່ອປະເພດນີ້ຈະສາມາດສຳເລັດຫຍັງໄດ້? ຈຸດປະສົງຂອງຄວາມເຊື່ອທີ່ພວກເຈົ້າມີຕໍ່ພຣະເຈົ້າແມ່ນເພື່ອໃຊ້ພຣະອົງເພື່ອບັນລຸເປົ້າໝາຍຂອງພວກເຈົ້າເອງ. ແລ້ວນີ້ບໍ່ແມ່ນຂໍ້ແທ້ຈິງແຫ່ງການເຮັດຜິດຂອງພວກເຈົ້າຕໍ່ອຸປະນິໄສຂອງພຣະເຈົ້າບໍ? ພວກເຈົ້າເຊື່ອໃນການເປັນຢູ່ຂອງພຣະເຈົ້າທີ່ຢູ່ໃນສະຫວັນ ແລະ ປະຕິເສດການເປັນຢູ່ຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກ, ເຖິງຢ່າງໃດກໍຕາມ ເຮົາບໍ່ຮັບຮູ້ມຸມມອງຂອງພວກເຈົ້າ; ເຮົາຍົກຍ້ອງພຽງແຕ່ຄົນທີ່ຕິດດິນ ແລະ ຮັບໃຊ້ພຣະເຈົ້າເທິງແຜ່ນດິນໂລກ, ບໍ່ແມ່ນຄົນທີ່ບໍ່ເຄີຍຮັບຮູ້ພຣະຄຣິດທີ່ຢູ່ເທິງແຜ່ນດິນໂລກຈັກເທື່ອ. ບໍ່ວ່າຜູ້ຄົນດັ່ງກ່າວຈະຊື່ສັດຕໍ່ພຣະເຈົ້າທີ່ຢູ່ໃນສະຫວັນສໍ່າໃດກໍຕາມ, ສຸດທ້າຍແລ້ວ ພວກເຂົາຈະບໍ່ພົ້ນຈາກມືຂອງເຮົາທີ່ຈະລົງໂທດຄົນຊົ່ວຮ້າຍເຫຼົ່ານີ້. ມະນຸດເຫຼົ່ານີ້ເປັນຄົນທີ່ຊົ່ວຮ້າຍ; ພວກເຂົາເປັນຄົນຊົ່ວຮ້າຍທີ່ຕໍ່ຕ້ານພຣະເຈົ້າ ແລະ ບໍ່ເຄີຍເຊື່ອຟັງພຣະຄຣິດດ້ວຍຄວາມຍິນດີ. ແນ່ນອນ ຈຳນວນຂອງພວກເຂົາລວມເຖິງທຸກຄົນທີ່ບໍ່ຮູ້ຈັກ ແລະ ຍິ່ງໄປກວ່ານັ້ນກໍຄືບໍ່ຮັບຮູ້ພຣະຄຣິດ. ເຈົ້າເຊື່ອບໍວ່າ ເຈົ້າສາມາດປະຕິບັດຕໍ່ພຣະຄຣິດຕາມທີ່ເຈົ້າພໍໃຈ ຕາບໃດທີ່ເຈົ້າຊື່ສັດຕໍ່ພຣະເຈົ້າທີ່ຢູ່ໃນສະຫວັນ? ຜິດແລ້ວ! ຄວາມບໍ່ຮູ້ພຣະຄຣິດຂອງເຈົ້າແມ່ນຄວາມບໍ່ຮູ້ພຣະເຈົ້າທີ່ຢູ່ໃນສະຫວັນ. ບໍ່ວ່າເຈົ້າຈະສັດຊື່ກັບພຣະເຈົ້າທີ່ຢູ່ໃນສະຫວັນສໍ່າໃດກໍຕາມ ມັນກໍເປັນພຽງການເວົ້າ ແລະ ການກະທຳທີ່ວ່າງເປົ່າ ຍ້ອນວ່າພຣະເຈົ້າເທິງແຜ່ນດິນໂລກບໍ່ໄດ້ເປັນພຽງແຕ່ເຄື່ອງມືທີ່ເຮັດໃຫ້ມະນຸດຮັບເອົາຄວາມຈິງ ແລະ ມີຄວາມຮູ້ທີ່ເລິກເຊິ່ງຂຶ້ນເທົ່ານັ້ນ ແຕ່ຍິ່ງໄປກວ່ານັ້ນແມ່ນເຄື່ອງມືໃນການກ່າວໂທດມະນຸດ ແລະ ຫຼັງຈາກນັ້ນກໍຍັງຄວ້າເອົາຂໍ້ແທ້ຈິງເພື່ອລົງໂທດຄົນຊົ່ວຮ້າຍ. ເຈົ້າເຄີຍເຂົ້າໃຈຜົນຕາມມາທີ່ເປັນປະໂຫຍດ ແລະ ເປັນໄພໃນທີ່ນີ້ບໍ? ເຈົ້າເຄີຍມີປະສົບການກັບພວກມັນບໍ? ເຮົາປາຖະໜາວ່າ ມື້ໃດມື້ໜຶ່ງໃນໄວໆນີ້ ພວກເຈົ້າຈະເຂົ້າໃຈຄວາມຈິງນີ້ ນັ້ນກໍຄື ເພື່ອທີ່ຈະຮູ້ຈັກພຣະເຈົ້າ ເຈົ້າຕ້ອງບໍ່ພຽງແຕ່ຮູ້ຈັກພຣະເຈົ້າໃນສະຫວັນ ແຕ່ສຳຄັນໄປກວ່ານັ້ນ ແມ່ນຮູ້ຈັກພຣະເຈົ້າເທິງ

ແຜ່ນດິນໂລກອີກດ້ວຍ. ຢ່າສັບສົນກັບບຸລິມະສິດຂອງເຈົ້າ ຫຼື ປ່ອຍໃຫ້ສິ່ງສຳຮອງມາຢູ່ເໜືອສິ່ງທີ່ເປັນຫຼັກ. ດ້ວຍວິທີນີ້ເທົ່ານັ້ນ ເຈົ້າຈຶ່ງຈະສາມາດສ້າງຄວາມສຳພັນທີ່ດີກັບພຣະເຈົ້າຢ່າງແທ້ຈິງ, ໃກ້ຊິດກັບພຣະເຈົ້າ ແລະ ນຳຫົວໃຈຂອງເຈົ້າເຂົ້າໃກ້ພຣະອົງຫຼາຍຂຶ້ນ. ຖ້າເຈົ້າມີຄວາມເຊື່ອເປັນເວລາຫຼາຍປີ ແລະ ໄດ້ພົວພັນກັບເຮົາເປັນເວລາດົນນານມາແລ້ວ ແຕ່ຍັງຄົງຫ່າງເຫີນຈາກເຮົາ ແລ້ວເຮົາກໍຈະເວົ້າວ່າ ມັນແມ່ນເຈົ້າທີ່ໄດ້ເຮັດຜິດຕໍ່ອຸປະນິໄສຂອງພຣະເຈົ້າຢູ່ເລື້ອຍໆ ແລະ ຈຸດຈົບຂອງເຈົ້າກໍຍາກຫຼາຍທີ່ຈະຄາດຄະເນໄດ້. ຖ້າການພົວພັນກັບເຮົາເປັນເວລາຫຼາຍປີບໍ່ພຽງແຕ່ລົ້ມເຫຼວທີ່ຈະປ່ຽນແປງໃຫ້ເຈົ້າກາຍເປັນຄົນທີ່ມີຄວາມເປັນມະນຸດ ແລະ ຄວາມຈິງໄດ້ ແຕ່ຍິ່ງໄປກວ່ານັ້ນ ມັນເຮັດໃຫ້ຝັງແໜ້ນວິທີການທີ່ຊົ່ວຮ້າຍຂອງເຈົ້າເຂົ້າໃນທຳມະຊາດຂອງເຈົ້າ ແລະ ເຈົ້າບໍ່ພຽງແຕ່ມີຄວາມອວດດີສອງເທົ່າກວ່າທີ່ມີແຕ່ກ່ອນ, ແຕ່ຄວາມເຂົ້າໃຈຜິດກ່ຽວກັບເຮົາຍິ່ງເພີ່ມທະວີຂຶ້ນ ຈົນເຈົ້າເຫັນເຮົາເປັນພຽງລູກນ້ອງຊັ້ນຕໍ່າຂອງເຈົ້າ ແລ້ວເຮົາຈະເວົ້າວ່າ ຄວາມເຈັບປວດຂອງເຈົ້າບໍ່ແມ່ນເລິກພຽງແຕ່ຢູ່ຜິວໜັງອີກຕໍ່ໄປ ແຕ່ມັນຈະຊຶມເຂົ້າໄປໃນກະດູກຂອງເຈົ້າ. ສິ່ງທີ່ຍັງເຫຼືອຢູ່ສຳລັບເຈົ້າແມ່ນພຽງລໍຖ້າຈັດງານສົບຂອງເຈົ້າ. ເຈົ້າບໍ່ຕ້ອງອ້ອນວອນຂໍໃຫ້ເຮົາເປັນພຣະເຈົ້າຂອງເຈົ້າ ຍ້ອນເຈົ້າໄດ້ເຮັດບາບທີ່ສົມຄວນຕາຍ ເຊິ່ງເປັນບາບທີ່ບໍ່ສາມາດໃຫ້ອະໄພໄດ້. ເຖິງແມ່ນວ່າ ເຮົາມີຄວາມເມດຕາຕໍ່ເຈົ້າ, ພຣະເຈົ້າທີ່ຢູ່ໃນສະຫວັນກໍຈະຢືນຢັນທີ່ຈະເອົາຊີວິດຂອງເຈົ້າ ຍ້ອນຄວາມຜິດຂອງເຈົ້າຕໍ່ອຸປະນິໄສຂອງພຣະເຈົ້ານັ້ນ ບໍ່ແມ່ນບັນຫາທຳມະດາ ແຕ່ເປັນບັນຫາມີທຳມະຊາດອັນຮ້າຍແຮງຫຼາຍ. ເມື່ອເຖິງເວລານັ້ນ ຢ່າໂທດວ່າເຮົາບໍ່ໄດ້ແຈ້ງໃຫ້ເຈົ້າຮູ້ລ່ວງໜ້າ. ທຸກສິ່ງແມ່ນຈະລົງເອີຍດ້ວຍວິທີນີ້ ນັ້ນກໍຄື ເມື່ອເຈົ້າກ່ຽວພັນກັບພຣະຄຣິດ ຜູ້ເປັນພຣະເຈົ້າເທິງແຜ່ນດິນໂລກທີ່ເປັນມະນຸດທຳມະດາ ນັ້ນກໍຄື ເມື່ອເຈົ້າເຊື່ອວ່າ ພຣະເຈົ້າອົງນີ້ບໍ່ໄດ້ເປັນຫຍັງເລີຍນອກຈາກບຸກຄົນໜຶ່ງ ແລ້ວຕອນນັ້ນ ເຈົ້າກໍຈະພົບກັບຄວາມຈິບຫາຍ. ນີ້ເປັນພຽງການຕັກເຕືອນຂອງເຮົາຕໍ່ພວກເຈົ້າທຸກຄົນເທົ່ານັ້ນ.

# ບັນຫາທີ່ຮ້າຍແຮງ: ການທໍລະຍົດ (1)

ພາລະກິດຂອງເຮົາຈະສຳເລັດໃນອີກໄວໆນີ້ ແລະ ຫຼາຍປີຮ່ວມກັນໄດ້ກາຍມາເປັນຄວາມຊົງຈຳທີ່ເຫຼືອທົນ. ເຮົາໄດ້ເວົ້າຊໍ້າພຣະທຳຂອງເຮົາຢ່າງບໍ່ຢຸດເຊົາ ແລະ ມາຍພາລະກິດໃຫມ່ຂອງເຮົາຢູ່ເລື້ອຍໆ. ແນ່ນອນ ຄຳແນະນຳຂອງເຮົາແມ່ນອົງປະກອບທີ່ຈຳເປັນໃນແຕ່ລະສ່ວນຂອງພາລະກິດທີ່ເຮົາເຮັດ. ຫາກປາສະຈາກຄຳປຶກສາຂອງເຮົາ, ພວກເຈົ້າທຸກຄົນຈະພະເນຈອນຫຼົງທາງ ແລະ ເຖິງກັບຄົ້ນພົບວ່າຕົນເອງສັບສົນຢ່າງສິ້ນເຊີງ. ໃນຕອນນີ້ ພາລະກິດຂອງເຮົາແມ່ນເກືອບຈະສຳເລັດ ແລະ ຢູ່ໃນຂັ້ນຕອນສຸດທ້າຍ. ເຮົາຍັງປາຖະໜາທີ່ຈະປະຕິບັດພາລະກິດໃນການໃຫ້ຄຳປຶກສາ ນັ້ນກໍຄື ໃຫ້ຄຳແນະນຳໃຫ້ພວກເຈົ້າຟັງ. ເຮົາພຽງແຕ່ຫວັງວ່າ ພວກເຈົ້າຈະບໍ່ເຮັດໃຫ້ຄວາມເຈັບປວດທີ່ເຮົາໄດ້ຮັບຕ້ອງເສຍເປົ່າ ແລະ ຍິ່ງໄປກວ່ານັ້ນ ເຮົາຫວັງວ່າ ພວກເຈົ້າຈະສາມາດເຂົ້າໃຈເຖິງຄວາມຫ່ວງໃຍເຫັນອົກເຫັນໃຈທີ່ເຮົາມີ ແລະ ປະຕິບັດຕໍ່ພຣະທຳຂອງເຮົາດັ່ງພື້ນຖານຂອງວິທີການທີ່ພວກເຈົ້າປະພຶດໃນຖານະມະນຸດ. ບໍ່ວ່າພວກມັນຈະເປັນພຣະທຳທີ່ພວກເຈົ້າເຕັມໃຈຮັບຟັງ ຫຼື ບໍ່, ບໍ່ວ່າພວກເຈົ້າຈະມີຄວາມສຸກໃນການຍອມຮັບພວກມັນ ຫຼື ພຽງແຕ່ສາມາດຍອມຮັບພວກມັນດ້ວຍຄວາມອຶດອັດ, ພວກເຈົ້າກໍຕ້ອງປະຕິບັດຕໍ່ພຣະທຳຢ່າງຈິງຈັງ. ບໍ່ດັ່ງນັ້ນ, ອຸປະນິໄສ ແລະ ການປະພຶດຕົວຕາມສະບາຍ ແລະ ບໍ່ກັງວົນຂອງພວກເຈົ້າຈະເຮັດໃຫ້ເຮົາໃຈຮ້າຍຢ່າງຮຸນແຮງ ແລະ ເຮັດໃຫ້ເຮົາລັງກຽດຢ່າງແນ່ນອນ. ເຮົາຫວັງຢ່າງຍິ່ງວ່າ ພວກເຈົ້າທຸກຄົນຈະສາມາດອ່ານພຣະທຳຂອງເຮົາຊໍ້າແລ້ວຊໍ້າອີກເປັນພັນໆຄັ້ງ ແລະພວກເຈົ້າອາດເຖິງກັບມາຮູ້ຈັກພຣະທຳເຫຼົ່ານັ້ນດ້ວຍໃຈ. ມີພຽງວິທີນີ້ເທົ່ານັ້ນ ພວກເຈົ້າຈຶ່ງຈະບໍ່ເຮັດໃຫ້ຄວາມຄາດຫວັງຂອງເຮົາສຳລັບພວກເຈົ້າລົ້ມເຫຼວໄດ້. ເຖິງຢ່າງໃດກໍຕາມ, ບໍ່ມີຜູ້ໃດໃນບັນດາພວກເຈົ້າທີ່ດຳລົງຊີວິດແບບນີ້ໃນປັດຈຸບັນ. ໃນທາງກົງກັນຂ້າມ, ພວກເຈົ້າທຸກຄົນແມ່ນໝົກມຸ້ນຢູ່ກັບຊີວິດທີ່ມຶນເມົາ, ຊີວິດແຫ່ງການກິນ ແລະ ດື່ມຕາມໃຈຂອງພວກເຈົ້າເອງ ແລະ ບໍ່ມີຜູ້ໃດໃນບັນດາພວກເຈົ້າໃຊ້ພຣະທຳຂອງເຮົາເພື່ອເພີ່ມພູນຫົວໃຈ ແລະ ວິນຍານຂອງພວກເຈົ້າ. ຍ້ອນເຫດຜົນນີ້ ເຮົາຈຶ່ງໄດ້ມາເຖິງຂໍ້ສະຫຼຸບກ່ຽວກັບໃບໜ້າແທ້ຈິງຂອງມະນຸດຊາດວ່າ: ມະນຸດສາມາດທໍລະຍົດຕໍ່ເຮົາໄດ້ທຸກເວລາ ແລະ ບໍ່ມີຜູ້ໃດສາມາດຊື່ສັດກັບພຣະທຳຂອງເຮົາໄດ້ຢ່າງແນ່ນອນ.

"ມະນຸດໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມຫຼາຍຈົນເຂົາບໍ່ມີຮູບລັກສະນະຂອງມະນຸດອີກຕໍ່ໄປ". ບັດນີ້ ຄົນສ່ວນໃຫຍ່ຮັບຮູ້ວະລີນີ້ຈົນເຖິງລະດັບໃດໜຶ່ງ. ເຮົາເວົ້າສິ່ງນີ້ ກໍຍ້ອນວ່າ "ການຍອມຮັບ" ທີ່ເຮົາໝາຍເຖິງເປັນພຽງການຮັບຮູ້ແບບຜິວເຜີນ ເຊິ່ງຂັດກັບຄວາມຮູ້ທີ່ແທ້ຈິງ. ເນື່ອງຈາກວ່າ ບໍ່ມີຜູ້ໃດໃນທ່າມກາງພວກເຈົ້າສາມາດປະເມີນຕົນເອງຢ່າງຖືກຕ້ອງ ຫຼື ວິເຄາະຕົວເອງຢ່າງທົ່ວເຖິງ, ພວກເຈົ້າຈຶ່ງຍັງບໍ່ແນ່ນອນກ່ຽວກັບພຣະທຳຂອງເຮົາ. ແຕ່ຄັ້ງນີ້ ເຮົາກຳລັງໃຊ້ຄວາມຈິງເພື່ອອະທິບາຍບັນຫາທີ່ຮ້າຍແຮງທີ່ສຸດທີ່ມີຢູ່ພາຍໃນພວກເຈົ້າມີ. ບັນຫານັ້ນກໍຄືການທໍລະຍົດ. ພວກເຈົ້າທຸກຄົນແມ່ນຄຸ້ນເຄີຍກັບຄຳວ່າ "ການທໍລະຍົດ" ຍ້ອນຜູ້ຄົນສ່ວນໃຫຍ່ໄດ້ເຮັດບາງສິ່ງທີ່ທໍລະຍົດຄົນອື່ນ, ເຊັ່ນ: ຜົວທໍລະຍົດເມຍຂອງລາວ, ເມຍທໍລະຍົດຜົວຂອງນາງ, ລູກຊາຍທໍລະຍົດພໍ່ຂອງລາວ, ລູກສາວ

ທໍລະຍົດແມ່ຂອງນາງ, ທາດທໍລະຍົດເຈົ້ານາຍຂອງເຂົາ, ໝູ່ເພື່ອທໍລະຍົດກັນເອງ, ຍາດຕິພີ່ນ້ອງທໍລະຍົດກັນເອງ, ຜູ້ຂາຍທໍລະຍົດຜູ້ຊື້ ແລະ ອື່ນໆອີກ. ຕົວຢ່າງທັງໝົດນີ້ປະກອບມີແກ່ນແທ້ຂອງການທໍລະຍົດ. ເວົ້າສັ້ນໆກໍຄື ການທໍລະຍົດແມ່ນພຶດຕິກຳຮູບແບບໜຶ່ງທີ່ຜິດຄຳສັນຍາ, ລະເມີດຫຼັກສິນທຳ ຫຼື ປະພຶດໂດຍຂັດກັບຈັນຍາບັນຂອງມະນຸດ ເຊິ່ງສະແດງໃຫ້ເຫັນເຖິງການສູນເສຍຂອງຄວາມເປັນມະນຸດ. ເວົ້າໂດຍລວມແລ້ວ ໃນຖານະເປັນມະນຸດ ຜູ້ທີ່ເກີດໃນໂລກນີ້, ເຈົ້າຈະໄດ້ເຮັດບາງສິ່ງທີ່ປະກອບເປັນການທໍລະຍົດຄວາມຈິງ, ບໍ່ວ່າເຈົ້າຈະຈື່ວ່າເຄີຍເຮັດບາງສິ່ງທີ່ທໍລະຍົດຄົນອື່ນ ຫຼື ບໍ່ ຫຼື ເຈົ້າໄດ້ທໍລະຍົດຄົນອື່ນຫຼາຍຄັ້ງກ່ອນໜ້ານີ້. ຍ້ອນເຈົ້າສາມາດທໍລະຍົດພໍ່ແມ່ ຫຼື ໝູ່ເພື່ອນຂອງເຈົ້າ, ແລ້ວເຈົ້າກໍສາມາດທໍລະຍົດຜູ້ອື່ນ ແລະ ຍິ່ງໄປກວ່ານັ້ນ ເຈົ້າສາມາດທໍລະຍົດເຮົາ ແລະ ເຮັດສິ່ງຕ່າງໆທີ່ເຮົາກຽດຊັງ. ເວົ້າອີກແບບໜຶ່ງກໍຄື ການທໍລະຍົດບໍ່ພຽງແຕ່ເປັນພຶດຕິກຳທີ່ໄຮ້ສິນທຳແບບຜິວເຜີນ, ແຕ່ເປັນສິ່ງທີ່ຂັດແຍ້ງກັບຄວາມຈິງ. ນີ້ແມ່ນແຫຼ່ງທີ່ມາຂອງການທີ່ມະນຸດຊາດຕໍ່ຕ້ານ ແລະ ບໍ່ເຊື່ອຟັງເຮົາຢ່າງແທ້ຈິງ. ນີ້ແມ່ນເຫດຜົນທີ່ ເຮົາໄດ້ສະຫຼຸບມັນຕາມຖ້ອຍຄຳດັ່ງຕໍ່ໄປນີ້: ການທໍລະຍົດແມ່ນທຳມະຊາດຂອງມະນຸດ ແລະ ທຳມະຊາດນີ້ແມ່ນສັດຕູທີ່ຍິ່ງໃຫຍ່ຂອງຄວາມສອດຄ່ອງຂອງແຕ່ລະຄົນກັບເຮົາ.

ພຶດຕິກຳທີ່ບໍ່ສາມາດເຊື່ອຟັງເຮົາຢ່າງແທ້ຈິງແມ່ນການທໍລະຍົດ. ພຶດຕິກຳທີ່ບໍ່ສາມາດຈົງຮັກພັກດີຕໍ່ເຮົາແມ່ນການທໍລະຍົດ. ການສໍ້ໂກງເຮົາ ແລະ ການໃຊ້ຄວາມຂີ້ຕົວະເພື່ອຫຼອກລວງເຮົາແມ່ນການທໍລະຍົດ. ການມີແນວຄິດຫຼາຍຢ່າງ ແລະ ການເຜີຍແຜ່ແນວຄິດເຫຼົ່ານັ້ນໄປທຸກບ່ອນແມ່ນການທໍລະຍົດ. ການບໍ່ສາມາດຢືນຢັດຄຳພະຍານ ແລະ ຜົນປະໂຫຍດຂອງເຮົາແມ່ນການທໍລະຍົດ. ການທຳທ່າຍິ້ມແບບປອມໆໃນຫົວໃຈ ໃນເວລາທີ່ຢູ່ຫ່າງໄກເຮົາແມ່ນການທໍລະຍົດ. ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນການກະທຳທີ່ທໍລະຍົດ ເຊິ່ງພວກເຈົ້າສາມາດເຮັດໄດ້ຢູ່ສະເໝີ ແລະ ພວກມັນກໍຍັງແມ່ນເລື່ອງທຳມະດາໃນບັນດາພວກເຈົ້າ. ບໍ່ມີຜູ້ໃດໃນທ່າມກາງພວກເຈົ້າທີ່ຄິດວ່າສິ່ງນີ້ແມ່ນບັນຫາ, ແຕ່ນັ້ນບໍ່ແມ່ນສິ່ງທີ່ເຮົາຄິດ. ເຮົາບໍ່ສາມາດຖືເອົາການທີ່ບຸກຄົນໃດໜຶ່ງທໍລະຍົດເຮົາເປັນເລື່ອງທີ່ບໍ່ສຳຄັນ ແລະ ເຮົາບໍ່ສາມາດເມີນເສີຍກັບມັນໄດ້ຢ່າງແນ່ນອນ. ບັດນີ້ ເມື່ອເຮົາປະຕິບັດພາລະກິດໃນທ່າມກາງພວກເຈົ້າ, ພວກເຈົ້າກໍປະພຶດໃນລັກສະນະນີ້, ຖ້າມື້ໜຶ່ງມາເຖິງເມື່ອບໍ່ມີໃຜເຝົ້າເບິ່ງພວກເຈົ້າ, ພວກເຈົ້າຈະບໍ່ເປັນຄືກັບໂຈນທີ່ແຕ່ງຕັ້ງຕົນເອງເປັນກະສັດແຫ່ງພູເຂົານ້ອຍໆຂອງພວກເຂົາບໍ? ເມື່ອສິ່ງນັ້ນເກີດຂຶ້ນ ແລະ ພວກເຈົ້າໄດ້ສ້າງໄພພິບັດ, ຜູ້ໃດຈະຢູ່ທີ່ນັ້ນເພື່ອທຳຄວາມສະອາດຫຼັງຈາກພວກເຈົ້າ? ພວກເຈົ້າຄິດວ່າ ການກະທຳທີ່ທໍລະຍົດບາງຄັ້ງກໍເປັນພຽງແຕ່ເຫດການຊົ່ວຄາວເທົ່ານັ້ນ, ບໍ່ແມ່ນພຶດຕິກຳຢ່າງຕໍ່ເນື່ອງຂອງພວກເຈົ້າ ແລະ ບໍ່ໄດ້ເກີດປະໂຫຍດຫຍັງຈາກການສົນທະນາດ້ວຍຄວາມຮຸນແຮງດັ່ງກ່າວ, ໃນລັກສະນະທີ່ທຳຮ້າຍຄວາມທະນົງຕົນຂອງພວກເຈົ້າ. ຖ້າພວກເຈົ້າຄິດແບບນັ້ນແທ້ໆ, ແລ້ວພວກເຈົ້າກໍຂາດຄວາມຮູ້ສຶກ. ການຄິດແບບນັ້ນເປັນຕົວຢ່າງ ແລະ ແມ່ພິມຂອງຄວາມກະບົດ. ທຳມະຊາດຂອງມະນຸດແມ່ນຊີວິດຂອງເຂົາ; ມັນແມ່ນຫຼັກການທີ່ເຂົາເພິ່ງພາເພື່ອຢູ່ລອດ ແລະ ເຂົາບໍ່ສາມາດປ່ຽນແປງມັນໄດ້. ຍົກຕົວຢ່າງແມ່ນທຳມະຊາດແຫ່ງຄວາມທໍລະຍົດ. ຖ້າຫາກເຈົ້າສາມາດເຮັດ

ບາງຢ່າງເພື່ອທຳລະຍົດຍາດຕິພີ່ນ້ອງ ຫຼື ໝູ່ເພື່ອນ, ມັນກໍພິສູດວ່າ ມັນເປັນສ່ວນໜຶ່ງຂອງຊີວິດຂອງເຈົ້າ ແລະ ທຳມະຊາດທີ່ເຈົ້າເກີດມາພ້ອມ. ນີ້ແມ່ນສິ່ງທີ່ບໍ່ມີໃຜສາມາດປະຕິເສດໄດ້. ຕົວຢ່າງເຊັ່ນ: ຖ້າບຸກຄົນໃດໜຶ່ງມັກລັກຂະໂມຍເຄື່ອງຂອງຄົນອື່ນ, ແລ້ວການມັກລັກຂະໂມຍ ນີ້ກໍແມ່ນສ່ວນໜຶ່ງໃນຊີວິດຂອງພວກເຂົາ, ເຖິງແມ່ນພວກເຂົາອາດລັກໃນບາງຄັ້ງ ແລະ ບາງຄັ້ງພວກເຂົາກໍບໍ່ລັກ. ບໍ່ວ່າພວກເຂົາຈະລັກ ຫຼື ບໍ່, ມັນບໍ່ສາມາດພິສູດວ່າ ການລັກຂະໂມຍຂອງພວກເຂົາເປັນພຽງເປັນພຶດຕິກຳປະເພດໜຶ່ງ. ກົງກັນຂ້າມ, ມັນພິສູດວ່າ ການລັກຂະໂມຍຂອງພວກເຂົາແມ່ນສ່ວນໜຶ່ງໃນຊີວິດຂອງພວກເຂົາ ນັ້ນກໍຄື ທຳມະຊາດຂອງພວກເຂົາ. ບາງຄົນຈະຖາມວ່າ: ຍ້ອນມັນເປັນທຳມະຊາດຂອງພວກເຂົາ, ແລ້ວເປັນຫຍັງເມື່ອພວກເຂົາເຫັນສິ່ງທີ່ສວຍງາມ, ບາງຄັ້ງພວກເຂົາກໍບໍ່ລັກເອົາສິ່ງເຫຼົ່ານັ້ນ? ຄຳຕອບແມ່ນງ່າຍຫຼາຍ. ມີຫຼາຍເຫດຜົນທີ່ພວກເຂົາບໍ່ລັກ. ພວກເຂົາອາດບໍ່ລັກບາງສິ່ງ ຍ້ອນມັນໃຫຍ່ເກີນໄປທີ່ຈະຍາດເອົາພາຍໃຕ້ສາຍຕາທີ່ຄອຍເຝົ້າເບິ່ງຢູ່ ຫຼື ຍ້ອນບໍ່ມີເວລາທີ່ເໝາະສົມທີ່ຈະເຮັດ ຫຼື ບາງສິ່ງມີລາຄາແພງເກີນໄປ, ມີການເຝົ້າຍາມຢ່າງເຂັ້ມງວດເກີນໄປ ຫຼື ບາງຄັ້ງ ພວກເຂົາບໍ່ມີຄວາມສົນໃຈເປັນພິເສດໃນສິ່ງນັ້ນ ຫຼື ບໍ່ສາມາດເຫັນວ່າມັນອາດມີປະໂຫຍດຫຍັງຕໍ່ພວກເຂົາ ແລະ ອື່ນໆອີກ. ເຫດຜົນທັງໝົດເຫຼົ່ານີ້ແມ່ນເປັນໄປໄດ້. ແຕ່ບໍ່ວ່າຫຍັງກໍຕາມ, ບໍ່ວ່າພວກເຂົາຈະລັກບາງສິ່ງ ຫຼື ບໍ່, ມັນກໍບໍ່ສາມາດພິສູດໄດ້ວ່າ ຄວາມຄິດນີ້ພຽງແຕ່ມີຢູ່ຊົ່ວຂະນະເທົ່ານັ້ນ ເຊິ່ງຜ່ານໄປຢ່າງໄວວາ. ໃນທາງກົງກັນຂ້າມ, ມັນແມ່ນສ່ວນໜຶ່ງຂອງທຳມະຊາດຂອງພວກເຂົາ ເຊິ່ງຍາກທີ່ຈະປ່ຽນແປງໃຫ້ດີຂຶ້ນໄດ້. ຄົນດັ່ງກ່າວແມ່ນບໍ່ພໍໃຈກັບການລັກຂະໂມຍແຕ່ຄັ້ງດຽວ; ຄວາມຄິດດັ່ງກ່າວທີ່ຈະເອົາເຄື່ອງຂອງຄົນອື່ນມາເປັນຂອງຕົນເອງເກີດຂຶ້ນເມື່ອໃດກໍຕາມທີ່ພວກເຂົາພົບກັບບາງສິ່ງທີ່ສວຍງາມ ຫຼື ຢູ່ໃນສະຖານະການທີ່ເໝາະສົມ. ນີ້ຄືເຫດຜົນທີ່ເຮົາເວົ້າວ່າ ແຫຼ່ງທີ່ມາຂອງຄວາມຄິດນີ້ບໍ່ແມ່ນສິ່ງທີ່ທີ່ເກີດຂຶ້ນເປັນຄັ້ງຄາວ ແຕ່ແມ່ນຢູ່ໃນທຳມະຊາດຂອງບຸກຄົນນີ້ເອງ.

ຜູ້ໃດກໍຕາມທີ່ສາມາດນຳໃຊ້ຄຳເວົ້າ ແລະ ການກະທຳຂອງພວກເຂົາເອງ ເພື່ອສະແດງເຖິງໃບໜ້າທີ່ແທ້ຈິງຂອງພວກເຂົາ. ແນ່ນອນ ໃບໜ້າທີ່ແທ້ຈິງນີ້ແມ່ນທຳມະຊາດຂອງພວກເຂົາ. ຖ້າເຈົ້າແມ່ນຄົນທີ່ເວົ້າໃນລັກສະນະທີ່ຫຼອກລວງ, ແລ້ວເຈົ້າກໍກະທຳໃນລັກສະນະທີ່ມີເລ່ຫຼ່ຽມ ແລະ ເຈົ້າເຮັດໃຫ້ມັນເປັນເລື່ອງງ່າຍຫຼາຍທີ່ຈະໃຫ້ຄົນອື່ນຖືກເຈົ້າຫຼອກລວງ. ຖ້າທຳມະຊາດຂອງເຈົ້າຊົ່ວຮ້າຍ, ຄຳເວົ້າຂອງເຈົ້າອາດຈະຟັງມ່ວນ, ແຕ່ການກະທຳຂອງເຈົ້າບໍ່ສາມາດປົກປັງກົນລວງທີ່ຊົ່ວຮ້າຍຂອງເຈົ້າໄດ້. ຖ້າທຳມະຊາດຂອງເຈົ້າຂີ້ຄ້ານ, ແລ້ວທຸກຢ່າງທີ່ເຈົ້າເວົ້າກໍຈະແມ່ນເພື່ອຫຼີກເວັ້ນຄວາມຮັບຜິດຊອບສຳລັບຄວາມເຮັດພໍເປັນພິທີ ແລະ ຄວາມຂີ້ຄ້ານຂອງເຈົ້າ ແລະ ການກະທຳຂອງເຈົ້າຈະຊ້າ ແລະ ພໍເປັນພິທີ ແລະ ຂ້ອນຂ້າງເກັ່ງໃນການປົກປັງຄວາມຈິງ. ຖ້າທຳມະຊາດຂອງເຈົ້າແມ່ນມີຄວາມເອົາໃຈໃສ່, ແລ້ວຄຳເວົ້າຂອງເຈົ້າກໍຈະມີເຫດຜົນ ແລະ ການກະທຳຂອງເຈົ້າກໍຍັງຈະສອດຄ່ອງກັບຄວາມຈິງເປັນຢ່າງດີເຊັ່ນກັນ. ຖ້າທຳມະຊາດຂອງເຈົ້າຄືຄວາມຈົງຮັກພັກດີ, ແລ້ວຄຳເວົ້າຂອງເຈົ້າຈິງໃຈຢ່າງແນ່ນອນ ແລະ ວິທີເຈົ້າເຮັດສິ່ງຕ່າງໆກໍມີເຫດຜົນ, ປາສະຈາກສິ່ງທີ່ອາດເຮັດໃຫ້ເຈົ້ານາຍຂອງເຈົ້າອຶດອັດ. ຖ້າທຳມະຊາດຂອງເຈົ້າແມ່ນເຕັມໄປດ້ວຍຕັນຫາ ຫຼື ໂລບມາເພື່ອເງິນ, ແລ້ວຫົວໃຈຂອງເຈົ້າກໍມັກຈະ

ເຕັມໄປດ້ວຍສິ່ງເຫຼົ່ານີ້ ແລະ ເຈົ້າຈະເຮັດການກະທຳທີ່ຜິດປົກກະຕິ ແລະ ໄຮ້ສິນທຳ ເຊິ່ງຜູ້ຄົນຈະບໍ່ລືມໄດ້ຢ່າງງ່າຍດາຍ ແລະ ຈະເຮັດໃຫ້ຜູ້ຄົນລັງກຽດ. ດັ່ງທີ່ເຮົາໄດ້ເວົ້າມາ, ຖ້າເຈົ້າມີທຳມະຊາດຂອງການທໍລະຍົດ ແລ້ວເຈົ້າກໍສາມາດປົດປ່ອຍຕົນເອງອອກຈາກມັນໄດ້ຍາກ. ຢ່າໄວ້ໃຈໃນໂຊກຊະຕາທີ່ວ່າ ຖ້າເຈົ້າບໍ່ໄດ້ຜິດຕໍ່ຄົນອື່ນ, ແລ້ວເຈົ້າກໍຈະບໍ່ມີທຳມະຊາດຂອງການທໍລະຍົດ. ຖ້ານັ້ນແມ່ນສິ່ງທີ່ເຈົ້າຄິດ ແລ້ວເຈົ້າກໍເປັນຄົນທີ່ໜ້າລັງກຽດ. ພຣະທຳທັງໝົດຂອງເຮົາໃນແຕ່ລະຄັ້ງທີ່ເຮົາໄດ້ກ່າວແມ່ນແນໃສ່ທຸກຄົນ, ບໍ່ແມ່ນພຽງແຕ່ໜຶ່ງຄົນ ຫຼື ຄົນປະເພດໃດໜຶ່ງ. ພຽງແຕ່ຍ້ອນເຈົ້າບໍ່ໄດ້ທໍລະຍົດເຮົາໃນເລື່ອງໜຶ່ງ ບໍ່ໄດ້ພິສູດວ່າ ເຈົ້າບໍ່ສາມາດທໍລະຍົດເຮົາໃນເລື່ອງໃດໜຶ່ງ. ໃນລະຫວ່າງຄວາມຜິດພາດໃນການແຕ່ງດອງຂອງພວກເຂົາ, ບາງຄົນສູນເສຍຄວາມໝັ້ນໃຈຂອງພວກເຂົາໃນການສະແຫວງຫາຄວາມຈິງ. ບາງຄົນປະຖິ້ມພັນທະຂອງພວກເຂົາທີ່ຈະຈົງຮັກພັກດີຕໍ່ເຮົາໃນລະຫວ່າງທີ່ຄອບຄົວແຕກແຍກ. ບາງຄົນປະຖິ້ມເຮົາເພື່ອສະແຫວງຫາຊ່ວງເວລາແຫ່ງຄວາມສຸກ ແລະ ຄວາມຕື່ນເຕັ້ນ. ບາງຄົນຍອມຕົກຢູ່ໃນຮ່ອມພູທີ່ມືດແທນທີ່ຈະອາໄສຢູ່ໃນແສງສະຫວ່າງ ແລະ ຮັບຄວາມສຸກຈາກພາລະກິດຂອງພຣະວິນຍານບໍລິສຸດ. ບາງຄົນເມີນເສີຍຄຳແນະນຳຂອງໝູ່ເພື່ອນ ເພື່ອເຫັນແກ່ການຕອບສະໜອງຕັນຫາພວກເຂົາສຳລັບຄວາມຮັ່ງມີ ແລະ ແມ່ນແຕ່ດຽວນີ້ກໍບໍ່ສາມາດຮັບຮູ້ເຖິງຄວາມຜິດພາດຂອງພວກເຂົາ ແລະ ປ່ຽນເສັ້ນທາງຂອງພວກເຂົາໄດ້. ບາງຄົນພຽງແຕ່ດຳເນີນຊີວິດຊົ່ວຄາວພາຍໃຕ້ຊື່ຂອງເຮົາເທົ່ານັ້ນ ເພື່ອໄດ້ຮັບການປົກປ້ອງຈາກເຮົາ, ໃນຂະນະທີ່ຄົນອື່ນພຽງແຕ່ອຸທິດເລັກນ້ອຍຕໍ່ເຮົາພາຍໃຕ້ການຖືກບີບບັງຄັບ ຍ້ອນວ່າພວກເຂົາຍຶດຕິດກັບຊີວິດ ແລະ ຢ້ານກົວຄວາມຕາຍ. ການກະທຳເຫຼົ່ານີ້ ແລະ ການກະທຳອື່ນໆທີ່ຜິດສິນທຳ ເຊິ່ງຍິ່ງໄປກວ່ານັ້ນແມ່ນການກະທຳທີ່ບໍ່ມີຄວາມຊື່ສັດ ບໍ່ແມ່ນພຶດຕິກຳທີ່ຜູ້ຄົນໄດ້ທໍລະຍົດເຮົາໃນສ່ວນເລິກຂອງຫົວໃຈຂອງພວກເຂົາແຕ່ດົນແລ້ວບໍ? ແນ່ນອນຢູ່, ເຮົາຮູ້ຈັກວ່າ ຜູ້ຄົນບໍ່ໄດ້ວາງແຜນລ່ວງໜ້າທີ່ຈະທໍລະຍົດເຮົາ; ການທໍລະຍົດຂອງພວກເຂົາແມ່ນການເປີດເຜີຍໂດຍທຳມະຊາດເຖິງທຳມະຊາດຂອງພວກເຂົາ. ບໍ່ມີໃຜຕ້ອງການຈະທໍລະຍົດຕໍ່ເຮົາ ແລະ ບໍ່ມີໃຜມີຄວາມສຸກ ຍ້ອນພວກເຂົາໄດ້ເຮັດບາງສິ່ງເພື່ອທໍລະຍົດເຮົາ. ໃນທາງກົງກັນຂ້າມ, ພວກເຂົາກຳລັງສັ່ນເຊັນດ້ວຍຄວາມຢ້ານກົວ ບໍ່ແມ່ນບໍ? ສະນັ້ນ ພວກເຈົ້າກຳລັງຄິດ ກ່ຽວກັບວິທີທີ່ຈະໄຖ່ການທໍລະຍົດເຫຼົ່ານີ້ ແລະ ວິທີທີ່ຈະປ່ຽນແປງສະຖານະການໃນປັດຈຸບັນບໍ?

# ບັນຫາທີ່ຮ້າຍແຮງ: ການທໍລະຍົດ (2)

ທຳມະຊາດຂອງມະນຸດແມ່ນຂ້ອນຂ້າງແຕກຕ່າງຈາກແກ່ນແທ້ຂອງເຮົາ, ຍ້ອນທຳມະຊາດທີ່ເສື່ອມຊາມຂອງມະນຸດແມ່ນເກີດມາຈາກຊາຕານທັງສິ້ນ; ທຳມະຊາດຂອງມະນຸດແມ່ນຖືກຊາຕານຈັດການ ແລະ ເຮັດໃຫ້ເສື່ອມຊາມ. ນັ້ນກໍຄື ມະນຸດດຳລົງຊີວິດພາຍໃຕ້ອິດທິພົນຂອງຄວາມຊົ່ວຮ້າຍ ແລະ ຄວາມຂີ້ຮ້າຍຂອງຊາຕານ. ມະນຸດບໍ່ໄດ້ເຕີບໃຫຍ່ຢູ່ໂລກແຫ່ງຄວາມຈິງ ຫຼື ສະພາບແວດລ້ອມທີ່ບໍລິສຸດ ແລະ ແຮງໄກທີ່ມະນຸດຈະດຳລົງຊີວິດໃນແສງສະຫວ່າງ. ດັ່ງນັ້ນ, ມັນຈຶ່ງເປັນໄປບໍ່ໄດ້ທີ່ຜູ້ໃດຜູ້ໜຶ່ງຈະມີຄວາມຈິງພາຍໃນທຳມະຊາດຂອງພວກເຂົາຕັ້ງແຕ່ຊ່ວງເວລາທີ່ເກີດມາ ແລະ ແຮງໄກທີ່ຜູ້ໃດຜູ້ໜຶ່ງຈະເກີດມາພ້ອມກັບແກ່ນແທ້ທີ່ຢຳເກງ ແລະ ເຊື່ອຟັງພຣະເຈົ້າ. ໃນທາງກົງກັນຂ້າມ ຜູ້ຄົນມີທຳມະຊາດທີ່ຕໍ່ຕ້ານພຣະເຈົ້າ, ບໍ່ເຊື່ອຟັງພຣະເຈົ້າ ແລະ ບໍ່ມີຄວາມຮັກສຳລັບຄວາມຈິງ. ທຳມະຊາດນີ້ແມ່ນບັນຫາທີ່ເຮົາຕ້ອງການສົນທະນາ ນັ້ນກໍຄື ການທໍລະຍົດ. ການທໍລະຍົດແມ່ນແຫຼ່ງທີ່ມາຂອງການທີ່ແຕ່ລະຄົນຕໍ່ຕ້ານພຣະເຈົ້າ. ນີ້ແມ່ນບັນຫາທີ່ມີຢູ່ໃນມະນຸດເທົ່ານັ້ນ ແລະ ບໍ່ໄດ້ມີຢູ່ໃນຕົວເຮົາ. ບາງຄົນຈະຖາມວ່າ: ຍ້ອນມະນຸດທຸກຄົນດຳລົງຊີວິດໃນໂລກດັ່ງທີ່ພຣະຄຣິດດຳລົງຢູ່, ເປັນຫຍັງມະນຸດທຸກຄົນຈຶ່ງມີທຳມະຊາດທີ່ທໍລະຍົດພຣະເຈົ້າ ແຕ່ພຣະຄຣິດບໍ່ມີ? ນີ້ແມ່ນບັນຫາທີ່ຕ້ອງໄດ້ອະທິບາຍໃຫ້ແກ່ພວກເຈົ້າຢ່າງຊັດເຈນ.

ພື້ນຖານການເປັນຢູ່ຂອງມະນຸດຊາດ ແມ່ນການກັບມາເກີດໃໝ່ຂອງວິນຍານຊໍ້າໄປຊໍ້າມາ. ເວົ້າອີກແບບໜຶ່ງກໍຄື ແຕ່ລະຄົນແມ່ນໄດ້ຮັບຊີວິດມະນຸດເປັນເນື້ອໜັງ ເມື່ອວິນຍານຂອງພວກເຂົາໄດ້ກັບມາເກີດໃໝ່. ຫຼັງຈາກທີ່ຮ່າງກາຍຂອງບຸກຄົນໜຶ່ງເກີດຂຶ້ນມາ, ຊີວິດນັ້ນແມ່ນສືບຕໍ່ຈົນເນື້ອໜັງໄປເຖິງຂອບເຂດຂອງມັນໃນທີ່ສຸດ ເຊິ່ງກໍຄືຊ່ວງເວລາສຸດທ້າຍ ເມື່ອວິນຍານອອກຈາກເປືອກນອກຂອງມັນ. ຂະບວນການນີ້ແມ່ນເກີດຂຶ້ນຊໍ້າແລ້ວຊໍ້າອີກ ໂດຍທີ່ວິນຍານຂອງບຸກຄົນໃດໜຶ່ງມາ ແລະ ໄປຄັ້ງແລ້ວຄັ້ງເລົ່າ ແລະ ດ້ວຍເຫດນັ້ນ ການເປັນຢູ່ຂອງມະນຸດຊາດຈຶ່ງຖືກຮັກສາ. ຊີວິດຂອງເນື້ອໜັງຍັງເປັນຊີວິດຂອງວິນຍານຂອງມະນຸດ ແລະ ວິນຍານຂອງມະນຸດສະໜັບສະໜູນການມີຢູ່ຂອງເນື້ອໜັງຂອງມະນຸດ. ນັ້ນໝາຍຄວາມວ່າ ຊີວິດຂອງແຕ່ລະຄົນແມ່ນມາຈາກວິນຍານຂອງພວກເຂົາ ແລະ ຊີວິດບໍ່ເນື້ອແທ້ຂອງເນື້ອໜັງ. ດັ່ງນັ້ນ, ທຳມະຊາດຂອງມະນຸດແມ່ນມາຈາກວິນຍານ, ບໍ່ແມ່ນມາຈາກເນື້ອໜັງ. ມີພຽງແຕ່ວິນຍານຂອງແຕ່ລະຄົນເທົ່ານັ້ນ ທີ່ຮູ້ຈັກວ່າ ພວກເຂົາໄດ້ປະສົບກັບການລໍ້ລວງ, ຄວາມເຈັບປວດ ແລະ ຄວາມເສື່ອມຊາມຂອງຊາຕານແນວໃດ. ສິ່ງເຫຼົ່ານີ້ແມ່ນບໍ່ສາມາດຮູ້ຈັກໄດ້ຕໍ່ເນື້ອໜັງຂອງມະນຸດ. ດັ່ງນັ້ນ, ມະນຸດຊາດຈຶ່ງມືດມົວຍິ່ງຂຶ້ນ, ສົກກະປົກຍິ່ງຂຶ້ນ ແລະ ຊົ່ວຮ້າຍຍິ່ງຂຶ້ນໂດຍບໍ່ຮູ້ຕົວ, ໃນຂະນະທີ່ໄລຍະຫ່າງລະຫວ່າງມະນຸດ ແລະ ເຮົາເອງແມ່ນເລີ່ມໄກອອກເລື້ອຍໆ ແລະຊີວິດຍິ່ງມືດມົວຂຶ້ນສຳລັບມະນຸດຊາດ. ຊາຕານຈັບວິນຍານຂອງມະນຸດໄວ້ໃນກຳມືຂອງມັນ, ສະນັ້ນເນື້ອໜັງຂອງມະນຸດແມ່ນຍັງຖືກຊາຕານຄອບງຳຢູ່ຢ່າງແນ່ນອນ. ເນື້ອໜັງດັ່ງກ່າວ ແລະ ມະນຸດດັ່ງກ່າວສາມາດທີ່ຈະບໍ່ຕໍ່ຕ້ານພຣະເຈົ້າໄດ້ແນວໃດ? ພວກເຂົາຈະສາມາດເຂົ້າກັບພຣະອົງໂດຍກຳເນີດ

ໄດ້ແນວໃດ? ເຫດຜົນທີ່ເຮົາໂຍນຊາຕານລົງສູ່ກາງອາກາດກໍຍ້ອນວ່າ ມັນທໍລະຍົດເຮົາ. ແລ້ວມະນຸດຈະຫຼຸດພົ້ນຈາກການມີສ່ວນຮ່ວມຂອງພວກເຂົາໄດ້ແນວໃດ? ນີ້ແມ່ນເຫດຜົນທີ່ວ່າ ການທໍລະຍົດແມ່ນທຳມະຊາດຂອງມະນຸດ. ເຮົາໄວ້ວາງໃຈວ່າ ຫຼັງຈາກທີ່ພວກເຈົ້າເຂົ້າໃຈເຫດຜົນນີ້ແລ້ວ, ພວກເຈົ້າກໍຄວນມີມາດຕະການຄວາມເຊື່ອໃນລະດັບໃດໜຶ່ງໃນແກ່ນແທ້ຂອງພຣະຄຣິດເຊັ່ນກັນ. ເນື້ອໜັງທີ່ພຣະວິນຍານຂອງພຣະເຈົ້າສະຖິດຢູ່ແມ່ນເນື້ອໜັງຂອງພຣະເຈົ້າເອງ. ພຣະວິນຍານຂອງພຣະເຈົ້າສູງສຸດ; ພຣະອົງຊົງລິດທານຸພາບສູງສຸດ, ບໍລິສຸດ ແລະ ຊອບທຳ. ໃນທຳນອງດຽວກັນນັ້ນ, ເນື້ອໜັງຂອງພຣະອົງກໍສູງສຸດ, ຊົງລິດທານຸພາບສູງສຸດ, ບໍລິສຸດ ແລະ ຊອບທຳເຊັ່ນກັນ. ເນື້ອໜັງດັ່ງກ່າວແມ່ນພຽງແຕ່ສາມາດເຮັດໃນສິ່ງທີ່ຊອບທຳ ແລະ ເປັນປະໂຫຍດແກ່ມະນຸດຊາດ, ເຮັດໃນສິ່ງທີ່ບໍລິສຸດ, ມີສະຫງ່າລາສີ ແລະ ຍິ່ງໃຫຍ່; ພຣະອົງບໍ່ສາມາດເຮັດສິ່ງທີ່ລະເມີດຄວາມຈິງ, ລະເມີດສິນທຳ ແລະ ຄວາມຍຸຕິທຳ ແລ້ວແຮງໄກທີ່ພຣະອົງຈະສາມາດເຮັດສິ່ງທີ່ທໍລະຍົດພຣະວິນຍານຂອງພຣະເຈົ້າ. ພຣະວິນຍານຂອງພຣະເຈົ້າບໍລິສຸດ ແລະ ດ້ວຍເຫດນັ້ນ ເນື້ອໜັງຂອງພຣະອົງຈຶ່ງບໍ່ສາມາດຖືກຊາຕານເຮັດໃຫ້ເສື່ອມຊາມ; ເນື້ອໜັງຂອງພຣະອົງມີແກ່ນແທ້ທີ່ແຕກຕ່າງຈາກເນື້ອໜັງຂອງມະນຸດ. ຍ້ອນເປັນມະນຸດ ບໍ່ແມ່ນພຣະເຈົ້າ ທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ; ຊາຕານບໍ່ສາມາດເຮັດໃຫ້ເນື້ອໜັງຂອງພຣະເຈົ້າເສື່ອມຊາມໄດ້. ສະນັ້ນ, ເຖິງວ່າມະນຸດ ແລະ ພຣະຄຣິດຈະອາໄສຢູ່ພາຍໃນພື້ນທີ່ດຽວກັນ, ມີພຽງແຕ່ມະນຸດເທົ່ານັ້ນທີ່ຖືກຊາຕານຄອບງຳ, ນຳໃຊ້ ແລະ ດັກຈັບ. ໃນທາງກົງກັນຂ້າມ, ພຣະຄຣິດແມ່ນມີຄວາມແຂງແກ່ນຕໍ່ຄວາມເສື່ອມຊາມຂອງຊາຕານຢູ່ຕະຫຼອດການ ຍ້ອນວ່າ ຊາຕານຈະບໍ່ສາມາດຂຶ້ນໄປຢູ່ບ່ອນທີ່ສູງທີ່ສຸດຈັກເທື່ອ ແລະ ຈະບໍ່ສາມາດຫຍັບເຂົ້າໃກ້ພຣະເຈົ້າໄດ້ຈັກເທື່ອ. ມື້ນີ້, ພວກເຈົ້າທຸກຄົນຄວນເຂົ້າໃຈວ່າ ມີແຕ່ມະນຸດເທົ່ານັ້ນ ຜູ້ທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ ທີ່ທໍລະຍົດເຮົາ. ການທໍລະຍົດຈະບໍ່ເປັນບັນຫາທີ່ກ່ຽວຂ້ອງກັບພຣະຄຣິດແມ່ນແຕ່ໜ້ອຍດຽວ.

ວິນຍານທຸກດວງທີ່ຖືກຊາຕານເຮັດໃຫ້ເປັນທາດຢູ່ໃນ ອຳນາດຂອງຊາຕານ. ມີພຽງແຕ່ຜູ້ທີ່ເຊື່ອໃນພຣະຄຣິດເທົ່ານັ້ນ ທີ່ຖືກແຍກອອກມາ, ຊ່ວຍໃຫ້ລອດພົ້ນຈາກຄ້າຍຂອງຊາຕານ ແລະ ຖືກນຳເຂົ້າມາສູ່ອານາຈັກໃນປັດຈຸບັນ. ຜູ້ຄົນເຫຼົ່ານີ້ບໍ່ໄດ້ດຳລົງຊີວິດພາຍໃຕ້ອິດທິພົນຂອງຊາຕານອີກຕໍ່ໄປ. ເຖິງຢ່າງນັ້ນກໍຕາມ ທຳມະຊາດຂອງມະນຸດກໍຍັງຝັງເລິກຢູ່ໃນເນື້ອໜັງຂອງມະນຸດ. ເຖິງໝາຍຄວາມວ່າ ເຖິງແມ່ນວິນຍານຂອງພວກເຈົ້າໄດ້ຖືກຊ່ວຍໃຫ້ລອດພົ້ນ, ທຳມະຊາດຂອງພວກເຈົ້າກໍຍັງເປັນຄືກັບທີ່ມັນເປັນໃນເມື່ອກ່ອນ ແລະ ໂອກາດທີ່ພວກເຈົ້າຈະທໍລະຍົດເຮົາກໍຍັງຄົງມີຢູ່ໜຶ່ງຮ້ອຍເປີເຊັນ. ນັ້ນກໍຄືເຫດຜົນທີ່ພາລະກິດຂອງເຮົາໃຊ້ເວລາຍາວນານຫຼາຍ ຍ້ອນວ່າ ທຳມະຊາດຂອງພວກເຈົ້າແມ່ນຍາກທີ່ຈະຮັກສາ. ຕອນນີ້ ພວກເຈົ້າທຸກຄົນແມ່ນກຳລັງຜະເຊີນກັບຄວາມລຳບາກດ້ວຍສຸດຄວາມສາມາດຂອງພວກເຈົ້າ ໃນຂະນະທີ່ພວກເຈົ້າປະຕິບັດໜ້າທີ່ຂອງພວກເຈົ້າ, ແຕ່ພວກເຈົ້າແຕ່ລະຄົນບໍ່ສາມາດທໍລະຍົດເຮົາ ແລະ ກັບຄືນສູ່ອຳນາດຂອງຊາຕານ, ສູ່ຄ້າຍຂອງມັນ ແລະ ກັບໄປສູ່ຊີວິດເດີມຂອງພວກເຈົ້າ, ນີ້ແມ່ນຂໍ້ແທ້ຈິງທີ່ບໍ່ສາມາດປະຕິເສດໄດ້. ໃນເວລານັ້ນ ມັນຈະເປັນໄປບໍ່ໄດ້ທີ່ພວກເຈົ້າຈະ

ນຳສະເໜີຄວາມເປັນມະນຸດ ຫຼື ຮູບລັກສະນະຂອງມະນຸດແມ່ນແຕ່ໜ້ອຍດຽວ ດັ່ງທີ່ພວກເຈົ້າເຮັດໃນປັດຈຸບັນ. ໃນກໍລະນີທີ່ຮ້າຍແຮງ ພວກເຈົ້າຈະຖືກທຳລາຍ ແລະ ຍິ່ງໄປກວ່ານັ້ນ ກໍຈະພິນາດຕະຫຼອດການ, ຖືກລົງໂທດຢ່າງຮຸນແຮງ, ບໍ່ໄດ້ເກີດໃໝ່ອີກຈັກເທື່ອ. ນີ້ແມ່ນບັນຫາທີ່ຖືກວາງຢູ່ຕໍ່ໜ້າພວກເຈົ້າ. ເຮົາກຳລັງເຕືອນພວກເຈົ້າດ້ວຍວິທີນີ້ ເພື່ອວ່າ ຢ່າງທີໜຶ່ງ, ພາລະກິດຂອງເຮົາຈະບໍ່ສູນເປົ່າ ແລະ ຢ່າງທີສອງ ພວກເຈົ້າທຸກຄົນອາດດຳລົງຊີວິດໃນມື້ແຫ່ງແສງສະຫວ່າງ. ໃນຄວາມເປັນຈິງແລ້ວ, ເລື່ອງທີ່ບໍ່ວ່າພາລະກິດຂອງເຮົາສູນເປົ່າ ຫຼື ບໍ່ນັ້ນບໍ່ແມ່ນບັນຫາທີ່ສຳຄັນ. ສິ່ງທີ່ສຳຄັນແມ່ນພວກເຈົ້າສາມາດມີຊີວິດທີ່ມີຄວາມສຸກ ແລະ ອະນາຄົດທີ່ອັດສະຈັນ. ພາລະກິດຂອງເຮົາແມ່ນພາລະກິດຂອງການຊ່ວຍວິນຍານຂອງຜູ້ຄົນໃຫ້ລອດພົ້ນ. ຖ້າວິນຍານຂອງເຈົ້າຕົກໄປຢູ່ໃນມືຂອງຊາຕານ, ຮ່າງກາຍຂອງເຈົ້າກໍຈະບໍ່ດຳລົງຊີວິດຢ່າງສະຫງົບສຸກ. ຖ້າເຮົາປົກປ້ອງຮ່າງກາຍຂອງເຈົ້າ, ວິນຍານຂອງເຈົ້າກໍຈະຢູ່ພາຍໃຕ້ການເບິ່ງແຍງຂອງເຮົາຢ່າງແນ່ນອນ. ຖ້າເຮົາລັງກຽດເຈົ້າ, ຮ່າງກາຍ ແລະ ວິນຍານຂອງເຈົ້າກໍຈະຕົກໄປຢູ່ໃນມືຂອງຊາຕານທັນທີ. ແລ້ວເຈົ້າສາມາດຈິນຕະນາການເຖິງສະຖານະການຂອງເຈົ້າໄດ້ບໍ? ຖ້າມື້ໜຶ່ງພຣະທຳຂອງເຮົາສູນເສຍໃນຕົວພວກເຈົ້າ, ແລ້ວເຮົາກໍຈະມອບພວກເຈົ້າທຸກຄົນໃຫ້ແກ່ຊາຕານເຊິ່ງຈະເຮັດໃຫ້ພວກເຈົ້າຕົກລົງສູ່ການທໍລະມານທີ່ແສນເຈັບປວດຈົນຄວາມໃຈຮ້າຍຂອງເຮົາຫາຍໄປຈົນໝົດ ຫຼື ເຮົາເອງຈະເປັນຜູ້ລົງໂທດພວກເຈົ້າ ເຊິ່ງເປັນມະນຸດທີ່ບໍ່ສາມາດໄຖ່ຄືນໄດ້ ຍ້ອນວ່າຫົວໃຈຂອງພວກເຈົ້າທີ່ທໍລະຍົດເຮົາບໍ່ເຄີຍປ່ຽນແປງ.

ຕອນນີ້ ພວກເຈົ້າທຸກຄົນຄວນເບິ່ງຕົນເອງໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້, ເພື່ອເບິ່ງວ່າມີຄວາມທໍລະຍົດຫຼາຍສໍ່າໃດຢູ່ພາຍໃນພວກເຈົ້າ. ເຮົາກຳລັງລໍຖ້າການຕອບໂຕ້ຂອງພວກເຈົ້າຢ່າງກະຕືລືລົ້ນ. ຢ່າປະຕິບັດຕໍ່ເຮົາພໍເປັນພິທີ. ເຮົາບໍ່ເຄີຍຫຼິ້ນເກມກັບຜູ້ຄົນ. ຖ້າເຮົາເວົ້າວ່າເຮົາຈະເຮັດສິ່ງໃດສິ່ງໜຶ່ງ, ເຮົາກໍຈະເຮັດມັນຢ່າງແນ່ນອນ. ເຮົາຫວັງວ່າ ພວກເຈົ້າແຕ່ລະຄົນຈະເປັນຄົນທີ່ຮັບເອົາພຣະທຳຂອງເຮົາຢ່າງຈິງຈັງ ແລະ ບໍ່ຄິດວ່າ ພຣະທຳເຫຼົ່ານັ້ນແມ່ນນະວະນິຍາຍແຫ່ງວິທະຍາສາດ. ສິ່ງທີ່ເຮົາຕ້ອງການແມ່ນການກະທຳທີ່ເປັນຮູບປະທຳຈາກພວກເຈົ້າ, ບໍ່ແມ່ນຈິນຕະນາການຂອງພວກເຈົ້າ. ຕໍ່ໄປພວກເຈົ້າຕ້ອງຕອບຄຳຖາມຂອງເຮົາ ເຊິ່ງມີດັ່ງຕໍ່ໄປນີ້:

1. ຖ້າເຈົ້າແມ່ນຜູ້ໃຫ້ບໍລິການຢ່າງແທ້ຈິງ, ເຈົ້າຈະສາມາດໃຫ້ບໍລິການເຮົາໄດ້ຢ່າງຈົງຮັກພັກດີບໍ ໂດຍປາສະຈາກອົງປະກອບທີ່ພໍເປັນພິທີ ຫຼື ທາງດ້ານລົບ?
2. ຖ້າເຈົ້າພົບເຫັນວ່າ ເຮົາບໍ່ເຄີຍຮູ້ຄຸນຄ່າຂອງເຈົ້າ, ເຈົ້າຍັງຈະສາມາດຢູ່ ແລະ ໃຫ້ບໍລິການເຮົາຕະຫຼອດຊີວິດບໍ?
3. ຖ້າເຮົາຍັງເຢືອກເຢັນຫຼາຍຕໍ່ເຈົ້າ ເຖິງແມ່ນເຈົ້າໄດ້ໃຊ້ຄວາມພະຍາຍາມຫຼາຍ, ເຈົ້າຈະສາມາດສືບຕໍ່ເຮັດວຽກໃຫ້ເຮົາຢ່າງສັບສົນໃຈຢູ່ບໍ?
4. ພາຍຫຼັງເຈົ້າໄດ້ເສຍສະຫຼະເພື່ອເຮົາ, ຖ້າເຮົາບໍ່ໄດ້ຕອບສະໜອງຄວາມຕ້ອງການອັນເລັກນ້ອຍຂອງເຈົ້າ, ເຈົ້າຈະໝົດກຳລັງໃຈ ແລະ ຜິດຫວັງກັບເຮົາ ຫຼື ແມ່ນແຕ່ໃຈຮ້າຍ ແລະ ຮ້ອງດ່າບໍ?

5. ຖ້າເຈົ້າຈົງຮັກພັກດີຢູ່ສະເໝີ, ມີຄວາມຮັກຫຼາຍຕໍ່ເຮົາ, ແຕ່ເຈົ້າໄດ້ທົນທຸກກັບຄວາມເຈັບເປັນ, ຄວາມທຸກຍາກ ແລະ ການປະຖິ້ມໝູ່ເພື່ອນ ແລະ ຍາດຕິພີ່ນ້ອງຂອງເຈົ້າ ຫຼື ຖ້າເຈົ້າອົດກັ້ນກັບຄວາມໂຊກຮ້າຍອື່ນໆໃນຊີວິດ, ຄວາມຈົງຮັກພັກດີ ແລະ ຄວາມຮັກຂອງເຈົ້າທີ່ມີຕໍ່ເຮົາຍັງຈະສືບຕໍ່ຢູ່ບໍ?
6. ຖ້າສິ່ງທີ່ເຈົ້າຈິນຕະນາການໄວ້ໃນຫົວໃຈຂອງເຈົ້າບໍ່ກົງກັບສິ່ງທີ່ເຮົາໄດ້ເຮັດ, ເຈົ້າຈະຍ່າງຢູ່ເສັ້ນທາງໃນອະນາຄົດຂອງເຈົ້າໄດ້ແນວໃດ?
7. ຖ້າເຈົ້າບໍ່ໄດ້ຮັບສິ່ງທີ່ເຈົ້າຫວັງຈະໄດ້ຮັບ, ເຈົ້າຈະສາມາດສືບຕໍ່ເປັນຜູ້ຕິດຕາມເຮົາຢູ່ບໍ?
8. ຖ້າເຈົ້າບໍ່ເຄີຍເຂົ້າໃຈຈຸດປະສົງ ແລະ ຄວາມສຳຄັນຂອງພາລະກິດຂອງເຮົາ, ເຈົ້າຈະສາມາດເປັນຄົນທີ່ເຊື່ອຟັງ ທີ່ບໍ່ຕັດສິນ ແລະ ສະຫຼຸບຕາມອຳເພີໃຈໄດ້ບໍ?
9. ເຈົ້າສາມາດເຊີດຊູຂອງພຣະທຳທຸກຂໍ້ທີ່ເຮົາໄດ້ເວົ້າ ແລະ ພາລະກິດທັງໝົດທີ່ເຮົາໄດ້ເຮັດບໍໃນຂະນະທີ່ເຮົາຢູ່ຮ່ວມກັບມະນຸດຊາດ?
10. ເຈົ້າສາມາດເປັນຜູ້ຕິດຕາມທີ່ຈົງຮັກພັກດີຂອງເຮົາບໍ ທີ່ເຕັມໃຈທົນທຸກຕະຫຼອດຊີວິດເພື່ອເຮົາ ເຖິງແມ່ນວ່າ ເຈົ້າຈະບໍ່ໄດ້ຮັບຫຍັງກໍຕາມ?
11. ເພື່ອເຫັນແກ່ເຮົາ ເຈົ້າສາມາດທີ່ຈະປະຖິ້ມການພິຈາລະນາ, ການວາງແຜນ ຫຼື ການກະກຽມສຳລັບເສັ້ນທາງແຫ່ງຄວາມຢູ່ລອດໃນອະນາຄົດຂອງເຈົ້າບໍ?

ຄຳຖາມເຫຼົ່ານີ້ສະແດງເຖິງສິ່ງທີ່ເຮົາຮຽກຮ້ອງຈາກພວກເຈົ້າເປັນຄັ້ງສຸດທ້າຍ ແລະ ເຮົາຫວັງວ່າພວກເຈົ້າທຸກຄົນຈະສາມາດຕອບເຮົາໄດ້. ຖ້າເຈົ້າຕອບໜຶ່ງ ຫຼື ສອງສິ່ງທີ່ຄຳຖາມເຫຼົ່ານີ້ຖາມພວກເຈົ້າ, ແລ້ວເຈົ້າກໍຕ້ອງສືບຕໍ່ພະຍາຍາມ. ຖ້າເຈົ້າບໍ່ສາມາດເຮັດຕາມເງື່ອນໄຂແມ່ນແຕ່ຂໍ້ດຽວ, ເຈົ້າກໍເປັນຄົນປະເພດທີ່ຈະຖືກໂຍນເຂົ້າສູ່ນະຮົກຢ່າງແນ່ນອນ. ສຳລັບບຸກຄົນດັ່ງກ່າວ ເຮົາບໍ່ຈຳເປັນຕ້ອງເວົ້າຫຍັງເພີ່ມອີກ, ຍ້ອນວ່າ ພວກເຂົາບໍ່ແມ່ນຄົນທີ່ເຮັດຕາມເຮົາຢ່າງແນ່ນອນ. ເຮົາຈະສາມາດຮັກສາຜູ້ໃດຜູ້ໜຶ່ງທີ່ສາມາດທໍລະຍົດເຮົາໃຫ້ຢູ່ໃນເຮືອນຂອງເຮົາ ພາຍໃຕ້ສະຖານະການໃດກໍຕາມໄດ້ແນວໃດ? ສຳລັບຄົນທີ່ຍັງສາມາດທໍລະຍົດເຮົາໃນສະຖານະການສ່ວນໃຫຍ່, ເຮົາຈະສັງເກດເບິ່ງການປະຕິບັດຂອງພວກເຂົາກ່ອນເຮັດການຈັດແຈງອື່ນໆ. ຢ່າງໃດກໍຕາມ, ທຸກຄົນທີ່ສາມາດທໍລະຍົດເຮົາ, ບໍ່ວ່າຈະຢູ່ພາຍໃຕ້ສະພາບການໃດກໍຕາມ, ເຮົາຈະບໍ່ລືມຈັກເທື່ອ; ເຮົາຈະຈື່ພວກເຂົາໄວ້ໃນໃຈຂອງເຮົາ ແລະ ລໍຖ້າໂອກາດທີ່ຈະຕອບແທນການກະທຳອັນຊົ່ວຮ້າຍຂອງພວກເຂົາ. ຄວາມຮຽກຮ້ອງທີ່ເຮົາໄດ້ຍົກຂຶ້ນແມ່ນບັນຫາທັງໝົດທີ່ພວກເຈົ້າຕ້ອງກວດສອບໃນຕົນເອງ. ເຮົາຫວັງວ່າ ພວກເຈົ້າທຸກຄົນຈະສາມາດພິຈາລະນາບັນຫາເຫຼົ່ານັ້ນຢ່າງຈິງຈັງ ແລະ ບໍ່ປະຕິບັດຕໍ່ເຮົາແບບພໍເປັນພິທີ. ໃນອະນາຄົດອັນໃກ້, ເຮົາຈະກວດຄຳຕອບທີ່ພວກເຈົ້າໄດ້ໃຫ້ແກ່ເຮົາ ໂດຍທຽບໃສ່ກັບສິ່ງທີ່ເຮົາຮຽກຮ້ອງ. ເມື່ອເຖິງເວລານັ້ນ, ເຮົາຈະບໍ່ຮຽກຮ້ອງຫຍັງເພີ່ມຈາກພວກເຈົ້າ ແລະ ຈະບໍ່ໃຫ້ການຕັກເຕືອນທີ່ຈິງຈັງເພີ່ມເຕີມແກ່ພວກເຈົ້າອີກ. ກົງກັນຂ້າມ, ເຮົາຈະນຳໃຊ້ສິດອຳນາດຂອງເຮົາ. ຄົນທີ່ຄວນຖືກເກັບຮັກສາໄວ້ກໍຈະຖືກເກັບຮັກສາໄວ້, ຄົນທີ່ຄວນໄດ້ຮັບລາງວັນກໍຈະໄດ້ຮັບລາງວັນ, ຄົນທີ່ຄວນຖືກມອບໃຫ້ຊາຕານກໍ

ຈະຖືກມອບໃຫ້ຊາຕານ, ຄົນທີ່ຄວນໄດ້ຮັບການລົງໂທດຢ່າງໜັກກໍຈະໄດ້ຮັບການລົງໂທດຢ່າງໜັກ ແລະ ຄົນທີ່ຄວນຈິບຫາຍຈະຖືກທຳລາຍ. ສະນັ້ນ ມັນກໍຈະບໍ່ມີຜູ້ໃດລົບກວນເຮົາໃນມື້ຂອງເຮົາອີກຕໍ່ໄປ. ເຈົ້າເຊື່ອພຣະທຳຂອງເຮົາບໍ? ເຈົ້າເຊື່ອໃນຜົນກຳບໍ? ເຈົ້າເຊື່ອບໍ່ວ່າ ເຮົາຈະລົງໂທດຜູ້ທີ່ຊົ່ວຮ້າຍທຸກຄົນທີ່ໄດ້ຫຼອກລວງ ແລະ ທໍລະຍົດເຮົາ? ເຈົ້າຫວັງໃຫ້ມື້ນັ້ນມາຮອດໄວໆ ຫຼື ໃຫ້ມັນນານມາຮອດ? ເຈົ້າເປັນຄົນທີ່ຢ້ານກົວການລົງໂທດບໍ ຫຼື ເປັນຄົນທີ່ຈະຕໍ່ຕ້ານເຮົາແທນ ເຖິງແມ່ນວ່າພວກເຂົາຈະຕ້ອງທົນທຸກກັບການລົງໂທດກໍຕາມ? ເມື່ອມື້ນັ້ນມາຮອດ, ເຈົ້າຈະສາມາດຈິນຕະນາການໄດ້ບໍວ່າ ເຈົ້າຈະດຳລົງຊີວິດໃນທ່າມກາງສຽງໂຮ່ຮ້ອງດີໃຈ ແລະ ສຽງຫົວ ຫຼື ເຈົ້າຈະຮ້ອງໄຫ້ ແລະ ກັດແຂ້ວຂອງເຈົ້າ? ເຈົ້າຫວັງວ່າຢາກພົບກັບຈຸດຈົບແບບໃດ? ເຈົ້າເຄີຍພິຈາລະນາຢ່າງຈິງຈັງບໍວ່າ ເຈົ້າເຊື່ອໃນຕົວເຮົາໜຶ່ງຮ້ອຍເປີເຊັນ ຫຼື ສົງໄສໃນຕົວເຮົາໜຶ່ງຮ້ອຍເປີເຊັນ? ເຈົ້າເຄີຍພິຈາລະນາຢ່າງລະມັດລະວັງບໍວ່າ ການກະທຳ ແລະ ພຶດຕິກຳຂອງເຈົ້າຈະນຳຜົນໄດ້ຮັບ ແລະ ຜົນຕາມມາແບບໃດມາສູ່ເຈົ້າ? ເຈົ້າຫວັງຢ່າງແທ້ຈິງບໍວ່າ ພຣະທຳທັງໝົດຂອງເຮົາຈະຖືກເຮັດໃຫ້ສຳເລັດເທື່ອລະຂໍ້ ຫຼື ເຈົ້າຢ້ານກົວວ່າ ພຣະທຳຂອງເຮົາຈະຖືກເຮັດໃຫ້ສຳເລັດເທື່ອລະຂໍ້? ຖ້າເຈົ້າຫວັງໃຫ້ເຮົາຈາກໄປໂດຍໄວເພື່ອສຳເລັດພຣະທຳຂອງເຮົາ, ເຈົ້າຄວນປະຕິບັດແນວໃດຕໍ່ຄຳເວົ້າ ແລະ ການກະທຳຂອງເຈົ້າເອງ? ຖ້າເຈົ້າບໍ່ຫວັງໃຫ້ເຮົາຈາກໄປ ແລະ ບໍ່ຫວັງໃຫ້ພຣະທຳທັງໝົດຂອງເຮົາຖືກເຮັດໃຫ້ສຳເລັດໃນທັນທີ, ເປັນຫຍັງເຈົ້າຈຶ່ງເຊື່ອໃນຕົວເຮົາເລີຍ? ເຈົ້າຮູ້ແທ້ໆບໍວ່າ ເປັນຫຍັງເຈົ້າຈຶ່ງຕິດຕາມເຮົາ? ຖ້າເຫດຜົນຂອງເຈົ້າເປັນພຽງເພື່ອຂະຫຍາຍຂອບເຂດຄວາມຮູ້ຂອງເຈົ້າໃຫ້ກວ້າງຂຶ້ນ, ມັນກໍບໍ່ຈຳເປັນທີ່ຈະລົບກວນເຈົ້າເອງແບບນັ້ນ. ຖ້າມັນເປັນການໄດ້ຮັບພອນ ແລະ ຫຼີກເວັ້ນໄພພິບັດທີ່ກຳລັງຈະມາຮອດ, ເປັນຫຍັງເຈົ້າຈຶ່ງບໍ່ກັງວົນກ່ຽວກັບການປະພຶດຂອງເຈົ້າເອງ? ເປັນຫຍັງເຈົ້າຈຶ່ງບໍ່ຖາມຕົວເອງວ່າ ເຈົ້າສາມາດບັນລຸຄວາມຮຽກຮ້ອງຂອງເຮົາໄດ້ ຫຼື ບໍ່? ເປັນຫຍັງເຈົ້າຍັງບໍ່ຖາມຕົນເອງວ່າ ເຈົ້າມີຄຸນສົມບັດທີ່ຈະໄດ້ຮັບພອນທີ່ມາເຖິງ ຫຼື ບໍ່?

# ພວກເຈົ້າຄວນພິຈາລະນາການກະທຳຂອງພວກເຈົ້າ

ການກະທຳ ແລະ ການປະຕິບັດທຸກຢ່າງໃນຊີວິດຂອງພວກເຈົ້າສະແດງໃຫ້ເຫັນວ່າ ພວກເຈົ້າຕ້ອງໄດ້ຮັບຂໍ້ພຣະທຳຂອງເຮົາໃນແຕ່ລະມື້ເພື່ອເຕີມເຕັມພວກເຈົ້າ ຍ້ອນພວກເຈົ້າຂາດເຂີນຫຼາຍເກີນໄປ ແລະ ຄວາມຮູ້ ແລະ ຄວາມສາມາດຂອງພວກເຈົ້າທີ່ຈະຮັບກໍມີບໍ່ພຽງພໍ. ໃນຊີວິດປະຈຳວັນຂອງພວກເຈົ້າ, ພວກເຈົ້າດຳລົງຊີວິດທ່າມກາງບັນຍາກາດ ແລະ ສະພາບແວດລ້ອມທີ່ປາສະຈາກຄວາມຈິງ ຫຼື ຄວາມສຳນຶກທີ່ດີ. ພວກເຈົ້າຂາດຕົ້ນທຶນໃນການເອົາຕົວລອດ ແລະ ບໍ່ມີພື້ນຖານທີ່ຈະຮູ້ຈັກເຮົາ ຫຼື ຄວາມຈິງ. ຄວາມເຊື່ອຂອງພວກເຈົ້າແມ່ນບໍ່ໄດ້ຖືກສ້າງຂຶ້ນຈາກຫຍັງເລີຍ ນອກຈາກຄວາມເຊື່ອທີ່ເລື່ອນລອຍ ແລະ ບໍ່ມີຕົວຕົນ ຫຼື ຄວາມຮູ້ດ້ານທິດສະດີຢ່າງສູງ ແລະ ພິທີກຳທາງສາສະໜາ. ໃນແຕ່ລະມື້ ເຮົາເບິ່ງການເຄື່ອນໄຫວຂອງພວກເຈົ້າ, ກວດສອບເບິ່ງເຈດຕະນາ ແລະ ໝາກຜົນອັນຊົ່ວຮ້າຍຂອງພວກເຈົ້າ ແລະ ເຮົາບໍ່ເຄີຍພົບໃຜຈັກຄົນທີ່ວາງຫົວໃຈ ແລະ ວິນຍານຂອງເຂົາໄວ້ເທິງແທ່ນບູຊາທີ່ບໍ່ເຄີຍປ່ຽນແປງຂອງເຮົາຢ່າງແທ້ຈິງ. ດ້ວຍເຫດນັ້ນ ເຮົາຈຶ່ງບໍ່ເຕັມໃຈທີ່ຈະເສຍເວລາຖອກເທພຣະທຳທັງໝົດທີ່ເຮົາປາຖະໜາຈະກ່າວໃຫ້ແກ່ມະນຸດຊາດດັ່ງກ່າວ; ແຜນການດຽວໃນຫົວໃຈຂອງເຮົາແມ່ນເພື່ອພາລະກິດທີ່ຍັງບໍ່ສຳເລັດຂອງເຮົາ ແລະ ໃຫ້ຄົນທີ່ຢູ່ທ່າມກາງມະນຸດຊາດທີ່ເຮົາຍັງບໍ່ທັນໄດ້ຊ່ວຍໃຫ້ລອດພົ້ນ. ຢ່າງໃດກໍຕາມ ເຮົາປາຖະໜາໃຫ້ທຸກຄົນທີ່ຕິດຕາມເຮົາຈະໄດ້ຮັບຄວາມລອດພົ້ນຂອງເຮົາ ແລະ ຄວາມຈິງທີ່ພຣະທຳຂອງເຮົາປະທານໃຫ້ແກ່ມະນຸດ. ເຮົາຫວັງວ່າ ມື້ໜຶ່ງເມື່ອເຈົ້າປິດຕາຂອງເຈົ້າ, ເຈົ້າຈະເຫັນອານາຈັກທີ່ມີກິ່ນຫອມເຕັມໄປທົ່ວອາກາດ ແລະ ສາຍນໍ້າແຫ່ງຊີວິດຫລັ່ງໄຫຼໄປ, ບໍ່ແມ່ນໂລກເຢືອກເຢັນທີ່ວ່າງເປົ່າ ບ່ອນທີ່ເມກມືດປົກຄຸມທ້ອງຟ້າ ແລະ ສຽງຫອນທີ່ບໍ່ມີວັນສິ້ນສຸດ.

ໃນແຕ່ລະມື້, ການກະທຳ ແລະ ຄວາມຄິດຂອງທຸກຄົນແມ່ນໄດ້ຖືກເບິ່ງເຫັນໂດຍສາຍຕາຂອງຜູ້ໜຶ່ງ ແລະ ໃນເວລາດຽວກັນນັ້ນ ກໍຢູ່ໃນການກະກຽມສຳລັບອະນາຄົດຂອງພວກເຂົາເອງ. ນີ້ແມ່ນເສັ້ນທາງທີ່ທຸກສິ່ງທີ່ມີຊີວິດຕ້ອງຍ່າງຕາມ; ມັນຄືເສັ້ນທາງທີ່ເຮົາໄດ້ກຳນົດໄວ້ລ່ວງໜ້າສຳລັບທຸກຄົນແລ້ວ ແລະ ບໍ່ມີໃຜສາມາດຫຼົບໜີຈາກມັນ ຫຼື ໄດ້ຮັບການຍົກເວັ້ນເລີຍ. ພຣະທຳທີ່ເຮົາໄດ້ກ່າວແມ່ນມີຈຳນວນນັບບໍ່ຖ້ວນ ແລະ ຍິ່ງໄປກວ່ານັ້ນ ພາລະກິດທີ່ເຮົາໄດ້ປະຕິບັດແມ່ນບໍ່ສາມາດວັດແທກໄດ້. ທຸກໆມື້ ເຮົາເບິ່ງແຕ່ລະຄົນປະຕິບັດທຸກສິ່ງທີ່ພວກເຂົາຕ້ອງປະຕິບັດໂດຍທຳມະຊາດຕາມທຳມະຊາດທີ່ຕິດຝັງໃນຕົວຂອງພວກເຂົາ ແລະ ການພັດທະນາທຳມະຊາດຂອງພວກເຂົາ. ຫຼາຍຄົນໄດ້ເຂົ້າສູ່ "ເສັ້ນທາງທີ່ຖືກຕ້ອງ" ໂດຍບໍ່ຮູ້ຕົວ ເຊິ່ງເຮົາໄດ້ຈັດວາງໄວ້ເພື່ອເປີດເຜີຍມະນຸດປະເພດທີ່ແຕກຕ່າງກັນ. ເຮົາໄດ້ວາງມະນຸດປະເພດທີ່ແຕກຕ່າງກັນເຫຼົ່ານີ້ໃນສະພາບແວດລ້ອມທີ່ແຕກຕ່າງກັນຕັ້ງແຕ່ດົນມາແລ້ວ ແລະ ໃນສະຖານທີ່ໃຜລາວຂອງພວກເຂົາ ແຕ່ລະຄົນກໍໄດ້ສະແດງລັກສະນະຕາມທຳມະຊາດຂອງພວກເຂົາ. ບໍ່ມີໃຜທີ່ຈະຜູກມັດພວກເຂົາ, ບໍ່ມີໃຜທີ່ລໍ້ລວງພວກເຂົາ. ພວກເຂົາມີອິດສະຫຼະທັງໝົດ ແລະ ສິ່ງທີ່ພວກເຂົາສະແດງກໍອອກມາຢ່າງທຳມະຊາດ. ມີພຽງສິ່ງດຽວທີ່ຕິດຕາມພວກເຂົາ: ພຣະທຳຂອງເຮົາ. ດ້ວຍເຫດນັ້ນ ບາງຄົນຈຶ່ງອ່ານພຣະທຳຂອງເຮົາແບບບໍ່ເຕັມໃຈ, ບໍ່ເຄີຍປະຕິບັດພຣະທຳ

ເຫຼົ່ານັ້ນຈັກເທື່ອ ໂດຍເຮັດຢ່າງນັ້ນກໍພຽງແຕ່ເພື່ອຫຼີກຫຼ່ຽງຄວາມຕາຍ; ໃນຂະນະດຽວກັນ ຄົນອື່ນພັດພົບວ່າ ມັນເປັນເລື່ອງຍາກທີ່ຈະອົດທົນຕໍ່ມື້ຕ່າງໆໂດຍບໍ່ມີພຣະທຳຂອງເຮົານຳພາ ແລະ ກະກຽມໃຫ້ແກ່ພວກເຂົາ ແລະ ສະນັ້ນ ພວກເຂົາຈຶ່ງຍຶດໝັ້ນກັບພຣະທຳຂອງເຮົາຢ່າງເປັນທຳມະຊາດຢູ່ຕະຫຼອດເວລາ. ເມື່ອເວລາຜ່ານໄປ, ພວກເຂົາກໍຄົ້ນພົບຄວາມລັບຂອງຊີວິດມະນຸດ, ຈຸດໝາຍປາຍທາງຂອງມະນຸດຊາດ ແລະ ຄຸນຄ່າຂອງການເປັນມະນຸດ. ນີ້ເປັນພຽງການທີ່ມະນຸດຊາດຢູ່ໃນການສະຖິດຂອງເຮົາ ແລະ ເຮົາພຽງແຕ່ປ່ອຍໃຫ້ເລື່ອງລາວຕ່າງໆເປັນໄປຕາມທຳມະຊາດຂອງພວກມັນ. ເຮົາບໍ່ປະຕິບັດພາລະກິດຫຍັງທີ່ບັງຄັບໃຫ້ຜູ້ຄົນເອົາພຣະທຳຂອງເຮົາໄປເປັນພື້ນຖານຂອງການເປັນຢູ່ຂອງພວກເຂົາ. ດ້ວຍເຫດນັ້ນ ຄົນທີ່ບໍ່ເຄີຍມີຄວາມສຳນຶກ ຫຼື ຄົນທີ່ມີການເປັນຢູ່ເຊິ່ງບໍ່ເຄີຍມີຄຸນຄ່າ, ປະຖິ້ມພຣະທຳຂອງເຮົາຢ່າງໜ້າດ້ານ ແລະ ເຮັດຕາມທີ່ພວກເຂົາປາຖະໜາຫຼັງຈາກທີ່ສັງເກດວິທີທີ່ສິ່ງຕ່າງໆດຳເນີນໄປຢ່າງງຽບໆ. ພວກເຂົາເລີ່ມກຽດຊັງຄວາມຈິງ ແລະ ທຸກສິ່ງທີ່ມາຈາກເຮົາ. ຍິ່ງໄປກວ່ານັ້ນ ພວກເຂົາກຽດຊັງໃນການຢູ່ໃນເຮືອນຂອງເຮົາ. ເພື່ອເຫັນແກ່ຈຸດໝາຍປາຍທາງຂອງພວກເຂົາ ແລະ ເພື່ອຫຼີບໜີການລົງໂທດ, ຜູ້ຄົນເຫຼົ່ານີ້ອາໄສຢູ່ພາຍໃນເຮືອນຂອງເຮົາຊົ່ວຄາວ ເຖິງແມ່ນວ່າພວກເຂົາຈະໃຫ້ບໍລິການ. ເຖິງຢ່າງໃດກໍຕາມ ເຈດຕະນາ ແລະ ການປະຕິບັດຂອງພວກເຂົາແມ່ນບໍ່ເຄີຍປ່ຽນແປງ. ສິ່ງນີ້ເພີ່ມຄວາມປາຖະໜາຂອງພວກເຂົາເພື່ອໃຫ້ໄດ້ຮັບພອນ ແລະ ເພີ່ມຄວາມປາຖະໜາຂອງພວກເຂົາເພື່ອເຂົ້າສູ່ອານາຈັກເປັນຄັ້ງດຽວ ແລະ ຫຼັງຈາກນັ້ນແມ່ນຄົງຢູ່ໃນນັ້ນຕະຫຼອດໄປ ແມ່ນແຕ່ເພື່ອເຂົ້າສູ່ສະຫວັນຊົ່ວນິດນິລັນ. ຍິ່ງພວກເຂົາປາຖະໜາໃຫ້ມື້ຂອງເຮົາມາເຖິງໄວໆ, ພວກເຂົາຍິ່ງຮູ້ສຶກວ່າ ຄວາມຈິງກາຍເປັນອຸປະສັກ ເຊິ່ງເປັນສິ່ງກີດຂວາງໃນເສັ້ນທາງຂອງພວກເຂົາ. ພວກເຂົາເກືອບຈະບໍ່ສາມາດອົດໃຈລໍຖ້າທີ່ຈະກ້າວຂາເຂົ້າໄປໃນອານາຈັກເພື່ອຮັບພອນຈາກອານາຈັກແຫ່ງສະຫວັນຕະຫຼອດໄປໂດຍບໍ່ຈຳເປັນຕ້ອງສະແຫວງຫາຄວາມຈິງ ຫຼື ຍອມຮັບການພິພາກສາ ແລະ ການຂ້ຽນຕີ ແລະ ນອກເໜືອໄປກວ່ານັ້ນ ແມ່ນໂດຍບໍ່ຈຳເປັນຕ້ອງກົ້ມເກືອກໃນເຮືອນຂອງເຮົາ ແລະ ເຮັດຕາມທີ່ເຮົາສັ່ງ. ຄົນເຫຼົ່ານີ້ເຂົ້າສູ່ເຮືອນຂອງເຮົາບໍ່ແມ່ນເພື່ອປະຕິບັດຕາມຄວາມປາຖະໜາຂອງພວກເຂົາທີ່ສະແຫວງຫາຄວາມຈິງ ຫຼື ຮ່ວມມືກັບການຄຸ້ມຄອງຂອງເຮົາ; ເປົ້າໝາຍຂອງພວກເຂົາແມ່ນພຽງເພື່ອຢູ່ທ່າມກາງຜູ້ຄົນທີ່ບໍ່ຖືກທຳລາຍໃນຍຸກຕໍ່ໄປ. ດ້ວຍເຫດນັ້ນ ຫົວໃຈຂອງພວກເຂົາຈຶ່ງບໍ່ເຄີຍຮູ້ຈັກວ່າ ຄວາມຈິງແມ່ນຫຍັງ ຫຼື ຈະຮັບເອົາຄວາມຈິງໄດ້ແນວໃດ. ນີ້ຄືເຫດຜົນທີ່ວ່າ ເປັນຫຍັງຜູ້ຄົນດັ່ງກ່າວຈຶ່ງບໍ່ເຄີຍປະຕິບັດຄວາມຈິງ ຫຼື ຮັບຮູ້ເຖິງຄວາມຮ້າຍແຮງຂອງການເສື່ອມຊາມຂອງພວກເຂົາ ແຕ່ໄດ້ອາໄສຢູ່ໃນເຮືອນຂອງເຮົາດັ່ງ "ຄົນຮັບໃຊ້" ໂດຍຕະຫຼອດມາ. ພວກເຂົາລໍຖ້າການມາຂອງມື້ຂອງເຮົາ "ຢ່າງອົດທົນ" ແລະ ບໍ່ຮູ້ຈັກອິດເມື່ອຍໃນຂະນະທີ່ພວກເຂົາຖືກໂຍນໄປມາດ້ວຍວິທີການຂອງພາລະກິດຂອງເຮົາ. ແຕ່ບໍ່ວ່າພວກເຂົາຈະພະຍາຍາມຫຼາຍພຽງໃດກໍຕາມ ຫຼື ພວກເຂົາໄດ້ຈ່າຍໃນລາຄາຫຍັງກໍຕາມ, ບໍ່ມີຜູ້ໃດເຄີຍເຫັນ ພວກເຂົາທົນທຸກເພື່ອຄວາມຈິງ ຫຼື ມອບສິ່ງໃດສິ່ງໜຶ່ງເພື່ອເຮົາ. ໃນຫົວໃຈຂອງພວກເຂົາ, ພວກເຂົາບໍ່ສາມາດລໍຖ້າທີ່ຈະເຫັນມື້ທີ່ເຮົານຳຈຸດສິ້ນສຸດມາສູ່ຍຸກເກົ່າ ແລະ ຍິ່ງໄປກວ່ານັ້ນພວກເຂົາບໍ່ສາມາດລໍຖ້າທີ່ຈະຄົ້ນພົບວ່າ ລິດອຳນາດ ແລະ ສິດອຳນາດຂອງເຮົາຍິ່ງໃຫຍ່ພຽງໃດ. ສິ່ງທີ່

ພວກເຂົາບໍ່ເຄີຍຝ້າວເຮັດກໍຄືການປ່ຽນແປງຕົນເອງ ແລະ ການສະແຫວງຫາຄວາມຈິງ. ພວກເຂົາຮັກສິ່ງທີ່ເຮົາເບື່ອໜ່າຍ ແລະ ເບື່ອໜ່າຍໃນສິ່ງທີ່ເຮົາຮັກ. ພວກເຂົາປາຖະໜາໃນສິ່ງທີ່ເຮົາຊັງ ແຕ່ກໍຢ້ານສູນເສຍສິ່ງທີ່ເຮົາລັງກຽດ. ພວກເຂົາໃຊ້ຊີວິດຢູ່ໃນໂລກທີ່ຊົ່ວຮ້າຍນີ້ ໂດຍບໍ່ເຄີຍກຽດຊັງມັນເລີຍ ແລະຍັງຢ້ານຢູ່ເລິກໆວ່າເຮົາຈະທຳລາຍມັນອີກ. ໃນທ່າມກາງເຈດຕະນາທີ່ຂັດແຍ້ງກັນຂອງພວກເຂົາ, ພວກເຂົາຮັກໂລກນີ້ທີ່ເຮົາລັງກຽດ ແຕ່ກໍຍັງປາຖະໜາໃຫ້ເຮົາທຳລາຍມັນທັງໝົດຢ່າງຮີບດ່ວນ ເພື່ອພວກເຂົາຈະໄດ້ລອດພົ້ນຈາກຄວາມທົນທຸກແຫ່ງຄວາມພິນາດ ແລະ ປ່ຽນແປງໃຫ້ກາຍເປັນເຈົ້ານາຍໃນຍຸກຕໍ່ໄປ ກ່ອນທີ່ພວກເຂົາຈະຫັນເຫຈາກຫົນທາງທີ່ຖືກຕ້ອງ. ນີ້ກໍຍ້ອນວ່າ ພວກເຂົາບໍ່ໄດ້ຮັກຄວາມຈິງ ແລະ ເບື່ອໜ່າຍກັບທຸກສິ່ງທີ່ມາຈາກເຮົາ. ພວກເຂົາອາດກາຍເປັນ "ຄົນທີ່ເຊື່ອຟັງ" ໃນເວລາສັ້ນໆ ເພື່ອເຫັນແກ່ການບໍ່ສູນເສຍພອນ ແຕ່ຄວາມກະຕືລືລົ້ນຂອງພວກເຂົາເພື່ອຮັບພອນ ແລະຄວາມຢ້ານທີ່ຈະຈິບຫາຍ ແລະ ການເຂົ້າສູ່ທະເລສາບແຫ່ງໄຟທີ່ເຜົາຜານ ບໍ່ສາມາດຖືກປິດບັງໄດ້ຈັກເທື່ອ. ເມື່ອມື້ຂອງເຮົາໃກ້ເຂົ້າມາ ຄວາມປາຖະໜາຂອງພວກເຂົາກໍຄ່ອຍໆແຮງກ້າຂຶ້ນຢ່າງຕໍ່ເນື່ອງ. ແລ້ວຍິ່ງໄພພິບັດຍິ່ງໃຫຍ່ຫຼາຍເທົ່າໃດ ມັນກໍຍິ່ງເຮັດໃຫ້ພວກເຂົາຂາດທີ່ເພິ່ງຫຼາຍສໍ່ານັ້ນ ໂດຍບໍ່ຮູ້ວ່າຈະເລີ່ມຕົ້ນຈາກໃສເພື່ອເຮັດໃຫ້ເຮົາຍິນດີ ແລະ ຫຼີກເວັ້ນຈາກການສູນເສຍພອນທີ່ພວກເຂົາປາຖະໜາມາເປັນເວລາດົນນານ. ຜູ້ຄົນດັ່ງກ່າວຮ້ອນຮົນທີ່ຈະລົງມືປະຕິບັດຮັບໃຊ້ເປັນແຖວໜ້າ ທັນທີທີ່ມືຂອງເຮົາເລີ່ມຕົ້ນພາລະກິດ. ພວກເຂົາຄິດພຽງແຕ່ທີ່ຈະຫຼັ່ງໄຫຼໄປຢູ່ແນວໜ້າສຸດຂອງກອງທັບ ໂດຍຢ້ານຢ່າງເລິກໆວ່າເຮົາຈະບໍ່ເຫັນພວກເຂົາ. ພວກເຂົາເຮັດ ແລະ ເວົ້າໃນສິ່ງທີ່ພວກເຂົາຄິດວ່າຖືກຕ້ອງ ໂດຍບໍ່ເຄີຍຮູ້ວ່າການກະທຳ ແລະ ການປະຕິບັດຂອງພວກເຂົາບໍ່ເຄີຍກ່ຽວຂ້ອງກັບຄວາມຈິງເລີຍ ແລະການກະທຳຂອງພວກເຂົາພຽງແຕ່ລົບກວນ ແລະ ແຊກແຊງແຜນການຂອງເຮົາ. ພວກເຂົາອາດພະຍາຍາມຢ່າງເຕັມທີ່ ແລະ ອາດເປັນຈິງໃນຄວາມປະສົງ ແລະ ເຈດຕະນາຂອງພວກເຂົາທີ່ຈະອົດທົນກັບຄວາມຍາກລຳບາກ ແຕ່ໃນສິ່ງທີ່ພວກເຂົາເຮັດແມ່ນບໍ່ມີຫຍັງທີ່ກ່ຽວຂ້ອງກັບເຮົາເລີຍ ຍ້ອນເຮົາບໍ່ເຄີຍເຫັນວ່າ ການກະທຳຂອງພວກເຂົາມາຈາກເຈດຕະນາທີ່ດີ ແລ້ວແຮງໄກທີ່ເຮົາຈະໄດ້ເຫັນພວກເຂົາວາງສິ່ງໃດກໍຕາມເທິງແທ່ນບູຊາຂອງເຮົາ. ສິ່ງດັ່ງກ່າວແມ່ນການກະທຳທີ່ພວກເຂົາໄດ້ເຮັດຢູ່ຕໍ່ໜ້າເຮົາຕະຫຼອດເວລາຫຼາຍປີເຫຼົ່ານີ້.

ໃນຕອນທຳອິດ ເຮົາປາຖະໜາທີ່ຈະສະໜອງຄວາມຈິງຫຼາຍຂຶ້ນໃຫ້ແກ່ພວກເຈົ້າ ແຕ່ເຮົາຕ້ອງຢັບຢັ້ງຈາກການເຮັດເຊັ່ນນີ້ ເພາະທ່າທີຂອງພວກເຈົ້າທີ່ມີຕໍ່ຄວາມຈິງນັ້ນເຢັນຊາ ແລະ ເມີນເສີຍຫຼາຍເກີນໄປ; ເຮົາບໍ່ປາຖະໜາໃຫ້ຄວາມພະຍາຍາມຂອງເຮົາເສຍໄປລ້າໆ ຫຼື ເຮົາບໍ່ປາຖະໜາທີ່ຈະເຫັນຜູ້ຄົນຍຶດຖືໃນພຣະທຳຂອງເຮົາ ແຕ່ເຮັດທຸກສິ່ງທີ່ຕໍ່ຕ້ານເຮົາ, ເວົ້າຮ້າຍໃສ່ເຮົາ ແລະ ໝິ່ນປະໝາດເຮົາ. ຍ້ອນທ່າທີຂອງພວກເຈົ້າ ແລະ ຄວາມເປັນມະນຸດຂອງພວກເຈົ້າ, ເຮົາຈຶ່ງພຽງແຕ່ສະໜອງໃຫ້ແກ່ພວກເຈົ້າດ້ວຍສ່ວນທີ່ເລັກນ້ອຍ ແລະ ທີ່ສຳຄັນຫຼາຍໃນພຣະທຳຂອງເຮົາ ເຊິ່ງເຮັດໜ້າທີ່ເປັນພາລະກິດທົດລອງຂອງເຮົາທ່າມກາງມະນຸດຊາດ. ມີແຕ່ຕອນນີ້ ເຮົາຈຶ່ງໄດ້ຢືນຢັນວ່າ ການຕັດສິນໃຈ ແລະ ແຜນການທີ່ເຮົາໄດ້ສ້າງຂຶ້ນນັ້ນແມ່ນເໝາະສົມກັບຄວາມຕ້ອງການຂອງພວກເຈົ້າ ແລະ ຍິ່ງໄປກວ່ານັ້ນ ທ່າທີຂອງ

ເຮົາຕໍ່ມະນຸດຊາດແມ່ນທ່າທີທີ່ຖືກຕ້ອງ. ພຶດຕິກຳເປັນເວລາຫຼາຍປີຂອງພວກເຈົ້າຕໍ່ໜ້າເຮົາໄດ້ມອບຄຳຕອບທີ່ບໍ່ເຄີຍມີມາກ່ອນໃຫ້ແກ່ເຮົາ ແລະ ຄຳຖາມສຳລັບຄຳຕອບນີ້ກໍຄື: "ແມ່ນຫຍັງຄືທ່າທີຂອງມະນຸດຕໍ່ໜ້າຄວາມຈິງ ແລະ ພຣະເຈົ້າທີ່ແທ້ຈິງ?" ຄວາມພະຍາຍາມທີ່ເຮົາທຸ້ມເທໃສ່ມະນຸດໄດ້ພິສູດໃຫ້ເຫັນເຖິງແກ່ນແທ້ຂອງເຮົາໃນການຮັກມະນຸດ ແລະ ການກະທຳທຸກຢ່າງຂອງມະນຸດຕໍ່ໜ້າເຮົາໄດ້ພິສູດໃຫ້ເຫັນເຖິງແກ່ນແທ້ຂອງເຂົາທີ່ກຽດຊັງຄວາມຈິງ ແລະ ຕໍ່ຕ້ານເຮົາ. ຕະຫຼອດເວລາ ເຮົາເປັນຫ່ວງທຸກຄົນທີ່ຕິດຕາມເຮົາ ແຕ່ບໍ່ມີເວລາໃດເລີຍທີ່ຜູ້ຄົນທີ່ຕິດຕາມເຮົານັ້ນຈະສາມາດຮັບພຣະທຳຂອງເຮົາໄດ້; ພວກເຂົາບໍ່ສາມາດຮັບແມ່ນແຕ່ຂໍ້ສະເໜີຕ່າງໆຂອງເຮົາ. ສິ່ງນີ້ເຮັດໃຫ້ເຮົາເສົ້າໃຈຕະຫຼອດເວລາ. ບໍ່ມີຜູ້ໃດສາມາດເຂົ້າໃຈເຮົາ ແລະ ຍິ່ງໄປກວ່ານັ້ນ ບໍ່ມີຜູ້ໃດສາມາດຍອມຮັບເຮົາໄດ້ ເຖິງແມ່ນວ່າທ່າທີຂອງເຮົາຈະຈິງໃຈ ແລະ ພຣະທຳຂອງເຮົາຈະອ່ອນໂຍນ. ທຸກຄົນພະຍາຍາມປະຕິບັດພາລະກິດທີ່ເຮົາໄດ້ຝາກຝັງໃຫ້ກັບພວກເຂົາຕາມແນວຄວາມຄິດຂອງພວກເຂົາເອງ; ພວກເຂົາບໍ່ໄດ້ສະແຫວງຫາເຈດຕະນາຂອງເຮົາ ແລ້ວແຮງໄກທີ່ພວກເຂົາຈະຖາມເຖິງສິ່ງທີ່ເຮົາຮຽກຮ້ອງຈາກພວກເຂົາ. ພວກເຂົາຍັງອ້າງວ່າພວກເຂົາຮັບໃຊ້ເຮົາຢ່າງຊື່ສັດ ໃນຂະນະທີ່ພວກເຂົາພາກັນກະບົດຕໍ່ເຮົາ. ຫຼາຍຄົນເຊື່ອວ່າຄວາມຈິງທີ່ພວກເຂົາບໍ່ສາມາດຮັບໄດ້ ຫຼື ສິ່ງທີ່ພວກເຂົາບໍ່ສາມາດນຳໄປປະຕິບັດຕົວຈິງໄດ້ນັ້ນບໍ່ແມ່ນຄວາມຈິງ. ໃນຜູ້ຄົນດັ່ງກ່າວ, ຄວາມຈິງຂອງເຮົາກາຍເປັນສິ່ງທີ່ຖືກປະຕິເສດ ແລະ ຖືກປະຖິ້ມ. ໃນເວລາດຽວກັນ ຜູ້ຄົນຮັບຮູ້ວ່າເຮົາເປັນພຣະເຈົ້າໃນຄຳເວົ້າ ແຕ່ຍັງເຊື່ອວ່າເຮົາເປັນຄົນນອກທີ່ບໍ່ແມ່ນຄວາມຈິງ, ແນວທາງ ຫຼື ຊີວິດ. ບໍ່ມີຜູ້ໃດຮູ້ຈັກຄວາມຈິງນີ້: ພຣະທຳຂອງເຮົາເປັນຄວາມຈິງທີ່ບໍ່ປ່ຽນແປງຕະຫຼອດໄປ. ເຮົາເປັນຜູ້ໃຫ້ຊີວິດແກ່ມະນຸດ ແລະ ເປັນຜູ້ນຳພາໜຶ່ງດຽວສຳລັບມະນຸດຊາດ. ຄຸນຄ່າ ແລະ ຄວາມໝາຍຂອງພຣະທຳຂອງເຮົາບໍ່ໄດ້ຖືກກຳນົດຂຶ້ນໂດຍອີງຕາມວ່າມະນຸດຊາດຮັບຮູ້ ຫຼື ຍອມຮັບພຣະທຳເຫຼົ່ານີ້ ຫຼື ບໍ່ ແຕ່ອີງຕາມແກ່ນແທ້ຂອງພຣະທຳເອງ. ເຖິງແມ່ນວ່າ ບໍ່ມີຜູ້ໃດເທິງແຜ່ນດິນໂລກນີ້ຈະສາມາດຮັບພຣະທຳຂອງເຮົາໄດ້ກໍຕາມ ແຕ່ຄຸນຄ່າຂອງພຣະທຳຂອງເຮົາ ແລະ ຄວາມຊ່ວຍເຫຼືອຂອງພວກມັນ ທີ່ມີຕໍ່ມະນຸດຊາດບໍ່ອາດສາມາດປະເມີນໄດ້ໂດຍມະນຸດ. ດັ່ງນັ້ນ ເມື່ອຜະເຊີນກັບມະນຸດຫຼາຍຄົນທີ່ກະບົດ, ໂຕ້ແຍ້ງ ຫຼື ດູຖູກພຣະທຳຂອງເຮົາຢ່າງສິ້ນເຊີງ, ທ່າທີຂອງເຮົາຄືສິ່ງນີ້ເທົ່ານັ້ນ: ໃຫ້ເວລາ ແລະ ຄວາມຈິງເປັນພະຍານຂອງເຮົາ ແລະ ສະແດງໃຫ້ເຫັນວ່າພຣະທຳຂອງເຮົາແມ່ນຄວາມຈິງ, ແນວທາງ ແລະ ຊີວິດ. ໃຫ້ພຣະທຳຂອງເຮົາສະແດງໃຫ້ເຫັນວ່າທຸກສິ່ງທີ່ເຮົາກ່າວແມ່ນຖືກຕ້ອງ, ມັນເປັນສິ່ງທີ່ມະນຸດຄວນປະກອບມີ ແລະ ຍິ່ງໄປກວ່ານັ້ນ ແມ່ນເປັນສິ່ງທີ່ມະນຸດຄວນຍອມຮັບ. ເຮົາຈະໃຫ້ທຸກຄົນທີ່ຕິດຕາມເຮົາຮູ້ຈັກເຖິງຄວາມຈິງນີ້: ຄົນທີ່ບໍ່ສາມາດຍອມຮັບພຣະທຳຂອງເຮົາຢ່າງເຕັມເມັດເຕັມໜ່ວຍ, ຄົນທີ່ບໍ່ສາມາດນຳພຣະທຳຂອງເຮົາໄປປະຕິບັດຕົວຈິງ, ຄົນທີ່ບໍ່ສາມາດຄົ້ນພົບຈຸດປະສົງໃນພຣະທຳຂອງເຮົາ ແລະ ຄົນທີ່ບໍ່ສາມາດຮັບເອົາຄວາມລອດພົ້ນຍ້ອນພຣະທຳຂອງເຮົາ ແມ່ນຄົນທີ່ຖືກພຣະທຳຂອງເຮົາລົງໂທດ ແລະ ຍິ່ງໄປກວ່ານັ້ນ ແມ່ນເປັນຄົນທີ່ໄດ້ສູນເສຍຄວາມລອດພົ້ນຂອງເຮົາ ແລະຄ້ອນເລັກຂອງເຮົາຈະບໍ່ມີວັນຢູ່ໄກຈາກພວກເຂົາເລີຍ.

ວັນທີ 16 ເມສາ 2003

# ພຣະເຈົ້າເປັນແຫຼ່ງກຳເນີດແຫ່ງຊີວິດຂອງມະນຸດ

ເລີ່ມຕັ້ງແຕ່ຕອນທີ່ເຈົ້າຮ້ອງໄຫ້ເຂົ້າມາສູ່ໂລກນີ້, ເຈົ້າກໍເລີ່ມຕົ້ນປະຕິບັດໜ້າທີ່ຂອງເຈົ້າ. ຍ້ອນແຜນການຂອງພຣະເຈົ້າ ແລະ ຍ້ອນການກຳນົດໄວ້ລ່ວງໜ້າຂອງພຣະອົງ, ເຈົ້າປະຕິບັດບົດບາດຂອງເຈົ້າ ແລະ ເລີ່ມຕົ້ນການເດີນທາງໃນຊີວິດຂອງເຈົ້າ. ເບື້ອງຫຼັງຂອງເຈົ້າຈະເປັນແນວໃດກໍຕາມ ແລະ ການເດີນທາງຂ້າງໜ້າຂອງເຈົ້າຈະເປັນແນວໃດກໍຕາມ, ບໍ່ມີໃຜສາມາດໜີພົ້ນຈາກການປັ້ນແຕ່ງ ແລະ ການຈັດແຈງຈາກສະຫວັນ ແລະ ບໍ່ມີໃຜຄວບຄຸມຊະຕາກຳຂອງພວກເຂົາເອງໄດ້, ຍ້ອນວ່າ ມີພຽງແຕ່ພຣະອົງທີ່ປົກຄອງເໜືອທຸກສິ່ງເທົ່ານັ້ນຈຶ່ງສາມາດປະຕິບັດພາລະກິດດັ່ງກ່າວນີ້ໄດ້. ນັບຕັ້ງແຕ່ມື້ທີ່ມະນຸດເກີດຂຶ້ນມາ ພຣະເຈົ້າໄດ້ປະຕິບັດພາລະກິດຂອງພຣະອົງດ້ວຍວິທີນີ້, ຄຸ້ມຄອງຈັກກະວານ, ຊີ້ນຳກົດລະບຽບຂອງການປ່ຽນແປງສຳລັບສິ່ງທັງປວງ ແລະ ເສັ້ນໂຄຈອນຂອງການເຄື່ອນໄຫວຂອງສິ່ງເຫຼົ່ານັ້ນ. ເຊັ່ນດຽວກັບສັບພະສິ່ງທັງປວງ ມະນຸດໄດ້ຮັບການບຳລຸງຢ່າງງຽບໆ ແລະ ໂດຍບໍ່ຮູ້ຕົວຈາກຄວາມຫວານ ແລະ ນໍ້າຝົນ ແລະ ນໍ້າຄ້າງຈາກພຣະເຈົ້າ; ເຊັ່ນດຽວກັບສັບພະສິ່ງທັງປວງ ມະນຸດມີຊີວິດຢູ່ພາຍໃຕ້ການປັ້ນແຕ່ງດ້ວຍມືຂອງພຣະເຈົ້າຢ່າງບໍ່ຮູ້ຕົວ. ຫົວໃຈ ແລະ ວິນຍານຂອງມະນຸດແມ່ນຢູ່ໃນມືຂອງພຣະເຈົ້າ, ທຸກສິ່ງໃນຊີວິດຂອງເຂົາແມ່ນຢູ່ໃນສາຍຕາຂອງພຣະເຈົ້າ ບໍ່ວ່າເຈົ້າຈະເຊື່ອສິ່ງນີ້ ຫຼື ບໍ່, ສິ່ງໃດກໍຕາມ ແລະ ທຸກສິ່ງ ບໍ່ວ່າຈະມີຊີວິດ ຫຼື ບໍ່ມີຊີວິດກໍຕາມ, ຈະຜັນປ່ຽນ, ປ່ຽນແປງ, ເກີດໃໝ່ ແລະ ຫາຍໄປໂດຍອີງຕາມຄວາມຄິດຂອງພຣະເຈົ້າ. ສິ່ງດັ່ງກ່າວແມ່ນວິທີທີ່ພຣະເຈົ້າປົກຄອງເໜືອທຸກສິ່ງທັງໝົດ.

ໃນຂະນະທີ່ກາງຄືນໃກ້ເຂົ້າມາຢ່າງງຽບສະງັດ ໂດຍມະນຸດບໍ່ຮູ້ສຶກຕົວ, ຍ້ອນຫົວໃຈຂອງມະນຸດບໍ່ສາມາດຮັບຮູ້ໄດ້ວ່າ ກາງຄືນນັ້ນໃກ້ເຂົ້າມາແນວໃດ ຫຼື ມັນມາຈາກໃສ. ເມື່ອກາງຄືນຜ່ານໄປຢ່າງມິດງຽບ ມະນຸດກໍຕ້ອນຮັບແສງສະຫວ່າງຂອງກາງເວັນ ແຕ່ສຳລັບເລື່ອງທີ່ວ່າ ແສງສະຫວ່າງມາຈາກໃສ ແລະ ມັນຂັບໄລ່ຄວາມມືດຂອງກາງຄືນອອກໄປດ້ວຍວິທີໃດນັ້ນ ມະນຸດແມ່ນແຮງຮູ້ໜ້ອຍ ແລະ ເຖິງກັບບໍ່ຮູ້ເລີຍ. ການຜັດປ່ຽນຂອງກາງເວັນ ແລະ ກາງຄືນ ນຳພາມະນຸດຈາກໄລຍະໜຶ່ງໄປສູ່ອີກໄລຍະໜຶ່ງ, ຈາກບໍລິບົດປະຫວັດສາດໜຶ່ງໄປສູ່ບໍລິບົດປະຫວັດສາດຂອງຕອນຕໍ່ໄປ, ໃນຂະນະທີ່ຍັງຮັບຮອງວ່າພາລະກິດຂອງພຣະເຈົ້າໃນທຸກໄລຍະ ແລະ ແຜນການຂອງພຣະອົງສຳລັບແຕ່ລະຍຸກຈະຖືກເຮັດໃຫ້ສຳເລັດ. ມະນຸດໄດ້ຍ່າງຜ່ານໄລຍະເວລາເຫຼົ່ານີ້ໄປພ້ອມກັນກັບພຣະເຈົ້າ ແຕ່ເຂົາບໍ່ຮູ້ວ່າພຣະເຈົ້າປົກຄອງຊະຕາກຳຂອງສັບພະທຸກສິ່ງ ແລະ ທຸກສິ່ງທີ່ມີຊີວິດ ຫຼື ບໍ່ຮູ້ວ່າພຣະເຈົ້າປັ້ນແຕ່ງ ແລະ ຄວບຄຸມສັບພະສິ່ງທັງປວງແນວໃດ. ນີ້ຄືສິ່ງທີ່ຫຼົບຫຼີກມະນຸດຕັ້ງແຕ່ຍຸກບູຮານຈົນຮອດປັດຈຸບັນ. ສຳລັບເຫດຜົນນັ້ນ, ມັນບໍ່ແມ່ນເປັນຍ້ອນວ່າການກະທຳຂອງພຣະເຈົ້າລີ້ລັບເກີນໄປ ຫຼື ຍ້ອນແຜນການຂອງພຣະເຈົ້າຍັງບໍ່ໄດ້ກາຍເປັນຈິງເທື່ອ, ແຕ່ຍ້ອນຫົວໃຈ ແລະ ວິນຍານຂອງມະນຸດຫ່າງເຫີນຈາກພຣະເຈົ້າຫຼາຍເກີນໄປ ຈົນຮອດຈຸດທີ່ວ່າ ມະນຸດຍັງຢູ່ໃນການຮັບໃຊ້ຂອງຊາຕານ ເຖິງແມ່ນວ່າເຂົາກຳລັງຕິດຕາມພຣະເຈົ້າ ແລະ ຍັງບໍ່ຮູ້ຕົວເລີຍ. ບໍ່ມີໃຜທີ່ສະແຫວງຫາບາດກ້າວຂອງ

ພຣະເຈົ້າ ແລະ ການປາກົດຕົວຂອງພຣະອົງຢ່າງຫ້າວຫັນ ແລະ ບໍ່ມີໃຜເຕັມໃຈດຳລົງຢູ່ພາຍໃຕ້ການດູແລ ແລະ ການຮັກສາຂອງພຣະເຈົ້າ. ກົງກັນຂ້າມ ພວກເຂົາປາຖະໜາທີ່ຈະເພິ່ງພາການກັດເຊາະຂອງຊາຕານ ເຊິ່ງເປັນສິ່ງທີ່ຊົ່ວຮ້າຍ ເພື່ອປັບໃຫ້ເຂົ້າກັບໂລກໜ່ວຍນີ້ ແລະ ກົດລະບຽບແຫ່ງການມີຊີວິດຢູ່ທີ່ມະນຸດຊາດທີ່ຊົ່ວຮ້າຍປະຕິບັດຕາມ. ໃນເວລານີ້ ຫົວໃຈ ແລະ ວິນຍານຂອງມະນຸດໄດ້ກາຍມາເປັນບັນນາການໃຫ້ກັບຊາຕານ ແລະ ກາຍເປັນອາຫານຂອງຊາຕານ. ຍິ່ງໄປກວ່ານັ້ນ ຫົວໃຈ ແລະ ວິນຍານຂອງມະນຸດໄດ້ກາຍເປັນບ່ອນທີ່ຊາຕານສາມາດອາໄສຢູ່ ແລະ ເປັນສະໜາມຫຼິ້ນທີ່ເໝາະສົມຂອງມັນ. ດ້ວຍເຫດນີ້ ມະນຸດຈຶ່ງສູນເສຍຄວາມເຂົ້າໃຈໃນຫຼັກການຂອງການເປັນມະນຸດຂອງເຂົາ ແລະ ຄຸນຄ່າ ແລະ ຄວາມໝາຍຂອງການມີຊີວິດຢູ່ຂອງມະນຸດຢ່າງບໍ່ຮູ້ຕົວ. ກົດບັນຍັດຂອງພຣະເຈົ້າ ແລະ ພັນທະສັນຍາລະຫວ່າງພຣະເຈົ້າ ແລະ ມະນຸດຈາງຫາຍໄປຈາກຫົວໃຈຂອງມະນຸດເທື່ອລະໜ້ອຍ ແລະ ເຂົາກໍຢຸດທີ່ຈະສະແຫວງຫາ ຫຼື ສົນໃຈຕໍ່ພຣະເຈົ້າ. ເມື່ອເວລາຜ່ານໄປ ມະນຸດບໍ່ເຂົ້າໃຈອີກຕໍ່ໄປວ່າ ເປັນຫຍັງພຣະເຈົ້າຈຶ່ງສ້າງເຂົາ ຫຼື ເຂົາບໍ່ເຂົ້າໃຈພຣະທຳທີ່ມາຈາກປາກຂອງພຣະເຈົ້າ ແລະ ທຸກສິ່ງທີ່ມາຈາກພຣະເຈົ້າ. ແລ້ວມະນຸດກໍເລີ່ມຕໍ່ຕ້ານກົດເກນ ແລະ ບົດບັນຍັດຂອງພຣະເຈົ້າ ແລະ ຫົວໃຈ ແລະ ວິນຍານຂອງເຂົາກໍຕາຍໄປ... ພຣະເຈົ້າສູນເສຍມະນຸດທີ່ພຣະອົງສ້າງດັ່ງເດີມ ແລະ ມະນຸດກໍສູນເສຍຮາກເຫງົ້າທີ່ເຂົາມີໃນເບື້ອງຕົ້ນ: ນີ້ຄືຄວາມໂສກເສົ້າຂອງມະນຸດຊາດນີ້. ໃນຄວາມເປັນຈິງແລ້ວ ນັບຕັ້ງແຕ່ການເລີ່ມຕົ້ນທຳອິດຈົນເຖິງປັດຈຸບັນ ພຣະເຈົ້າໄດ້ຈັດສະແດງໂສກອະນາດຕະກຳໃຫ້ກັບມະນຸດຊາດ ເຊິ່ງມະນຸດເປັນທັງຕົວລະຄອນເອກ ແລະ ຜູ້ຮັບເຄາະ; ແລ້ວບໍ່ມີຜູ້ໃດສາມາດຕອບໄດ້ວ່າ ໃຜກຳກັບໂສກອະນາດຕະກຳນີ້.

ໃນໂລກທີ່ກວ້າງໃຫຍ່ໄພສານ, ມະຫາສະໝຸດຖືກຖົມດ້ວຍຂີ້ຕົມກາຍເປັນທົ່ງຫຍ້າ, ທົ່ງຫຍ້າຖືກນ້ຳຖ້ວມກາຍເປັນມະຫາສະໝຸດຊ້ຳແລ້ວຊ້ຳອີກ. ນອກຈາກພຣະອົງຜູ້ທີ່ປົກຄອງເໜືອທຸກສິ່ງໃນບັນດາສິ່ງທັງປວງ, ບໍ່ມີໃຜສາມາດນຳພາ ແລະ ຊີ້ນຳມະນຸດຊາດນີ້ໄດ້. ບໍ່ມີຄົນຍິ່ງໃຫຍ່ຄົນໃດທີ່ສາມາດປະຕິບັດວຽກງານ ຫຼື ຈັດແຈງໃຫ້ກັບມະນຸດຊາດນີ້ ແຮງໄກທີ່ຈະມີໃຜສາມາດນຳມະນຸດຊາດນີ້ໄປສູ່ຈຸດໝາຍປາຍທາງແຫ່ງແສງສະຫວ່າງ ແລະ ປົດປ່ອຍພວກເຂົາອອກຈາກຄວາມບໍ່ຍຸຕິທຳແຫ່ງແຜ່ນດິນໂລກນີ້ໄດ້. ພຣະເຈົ້າຄ່ຳຄວນເຖິງອານາຄົດຂອງມະນຸດຊາດ, ພຣະອົງໂສກເສົ້າເສຍໃຈກັບການພິນາດຂອງມະນຸດ ແລະ ເຈັບປວດທີ່ມະນຸດຊາດກຳລັງກ້າວໄປສູ່ຄວາມເນົ່າເປື່ອຍເທື່ອລະຂັ້ນ ແລະ ເຂົ້າສູ່ເສັ້ນທາງທີ່ຫວນກັບຄືນບໍ່ໄດ້. ບໍ່ມີຜູ້ໃດເຄີຍຄິດວ່າມະນຸດຊາດດັ່ງກ່າວທີ່ໄດ້ທຳລາຍຫົວໃຈຂອງພຣະເຈົ້າ ແລະ ປະຖິ້ມພຣະອົງເພື່ອສະແຫວງຫາສິ່ງທີ່ຊົ່ວຮ້າຍອາດມຸ່ງໜ້າໄປໃນທິດທາງໃດ. ມັນເປັນຍ້ອນເຫດຜົນນີ້ຢ່າງແນ່ນອນທີ່ບໍ່ມີໃຜຮູ້ສຶກເຖິງຄວາມໂກດຮ້າຍຂອງພຣະເຈົ້າ, ທີ່ວ່າເປັນຫຍັງຈຶ່ງບໍ່ມີໃຜສະແຫວງຫາຫົນທາງທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ ຫຼື ພະຍາຍາມທີ່ຈະເຂົ້າໃກ້ພຣະເຈົ້າຫຼາຍຂຶ້ນ ແລະ ຍິ່ງໄປກວ່ານັ້ນ, ທີ່ວ່າເປັນຫຍັງຈຶ່ງບໍ່ມີໃຜສະແຫວງຫາເພື່ອເຂົ້າໃຈເຖິງຄວາມໂສກເສົ້າ ແລະ ຄວາມເຈັບປວດຂອງພຣະເຈົ້າເລີຍ. ແມ່ນແຕ່ຫຼັງຈາກທີ່ໄດ້ຍິນສຽງຂອງພຣະເຈົ້າມະນຸດກໍຍັງສືບຕໍ່ໃນເສັ້ນທາງຂອງຕົນເອງ, ຢືນຢັນທີ່ຈະອອກຫ່າງຈາກພຣະເຈົ້າ, ຫຼີກຫຼີກພຣະຄຸນ

ແລະ ການດູແລຂອງພຣະເຈົ້າ ແລະ ຫຼີກເວັ້ນຄວາມຈິງຂອງພຣະອົງ, ເລືອກທີ່ຈະຂາຍຕົນເອງໃຫ້ກັບຊາຕານ ເຊິ່ງເປັນສັດຕູຂອງພຣະເຈົ້າ. ຜູ້ໃດເຄີຍຄຳນຶງບໍ່ວ່າ ຖ້າມະນຸດຢືນຢັນໃນຄວາມດື້ດ້ານຂອງເຂົາ ແລ້ວພຣະເຈົ້າຈະປະຕິບັດຕໍ່ມະນຸດຊາດນີ້ທີ່ປ່ອຍຖິ້ມພຣະອົງໄປໂດຍບໍ່ຫຼຽວຫຼັງແນວໃດ? ບໍ່ມີໃຜຮູ້ວ່າເຫດຜົນສຳລັບການເຕືອນໃຈ ແລະ ການຕັກເຕືອນຊໍ້າແລ້ວຊໍ້າອີກຈາກພຣະເຈົ້າແມ່ນຍ້ອນພຣະອົງໄດ້ກຽມໄພພິບັດທີ່ບໍ່ເຄີຍມີມາກ່ອນໄວ້ໃນມືຂອງພຣະອົງແລ້ວ ເຊິ່ງຈະເປັນໄພພິບັດທີ່ເນື້ອໜັງ ແລະວິນຍານຂອງມະນຸດບໍ່ສາມາດທົນໄດ້. ໄພພິບັດນີ້ບໍ່ແມ່ນພຽງແຕ່ເປັນການລົງໂທດເນື້ອໜັງ ແຕ່ເປັນການລົງໂທດວິນຍານອີກດ້ວຍ. ເຈົ້າຈຳເປັນຕ້ອງຮູ້ສິ່ງນີ້: ເມື່ອແຜນການຂອງພຣະເຈົ້າບໍ່ສຳເລັດ ແລະເມື່ອສິ່ງເຕືອນໃຈ ແລະ ການຕັກເຕືອນຂອງພຣະອົງບໍ່ໄດ້ຮັບການຕອບສະໜອງ, ພຣະອົງຈະປ່ອຍຄວາມໂກດຮ້າຍແບບໃດ? ມັນຈະເປັນສິ່ງທີ່ບໍ່ມີສິ່ງຖືກສ້າງໃດໆເຄີຍປະສົບ ຫຼື ໄດ້ຍິນມາກ່ອນ. ດັ່ງນັ້ນ ເຮົາຈຶ່ງເວົ້າວ່າ ໄພພິບັດນີ້ແມ່ນບໍ່ເຄີຍມີມາກ່ອນ ແລະ ຈະບໍ່ຖືກເຮັດຊໍ້າອີກຈັກເທື່ອ. ເພາະວ່າແຜນການຂອງພຣະເຈົ້າແມ່ນເພື່ອສ້າງມະນຸດຊາດພຽງຄັ້ງດຽວເທົ່ານັ້ນ ແລະ ຊ່ວຍມະນຸດຊາດໃຫ້ລອດພົ້ນພຽງຄັ້ງດຽວເທົ່ານັ້ນ. ນີ້ຄືຄັ້ງທຳອິດ ແລະ ມັນຍັງເປັນຄັ້ງສຸດທ້າຍ. ດ້ວຍເຫດນັ້ນ ບໍ່ມີໃຜສາມາດເຂົ້າໃຈເຈດຕະນາຢ່າງພາກພຽນ ແລະ ການຄາດຫວັງຢ່າງໃຫຍ່ຫຼວງທີ່ພຣະເຈົ້າຫວັງຊ່ວຍມະນຸດຊາດໃຫ້ລອດພົ້ນໃນຄັ້ງນີ້.

ພຣະເຈົ້າສ້າງໂລກໜ່ວຍນີ້ ແລະ ນຳມະນຸດມາສູ່ໂລກນີ້ ເຊິ່ງເປັນສິ່ງມີຊີວິດທີ່ພຣະອົງມອບຊີວິດໃຫ້. ຕໍ່ມາ ມະນຸດມີພໍ່ແມ່ ແລະ ຍາດພີ່ນ້ອງ ແລະ ບໍ່ໄດ້ຢູ່ໂດດດ່ຽວອີກຕໍ່ໄປ. ຕັ້ງແຕ່ມະນຸດມືນຕາເບິ່ງໂລກແຫ່ງວັດຖຸນີ້ເປັນຄັ້ງທຳອິດ ເຂົາກໍຖືກກຳນົດຊີວິດໃຫ້ຢູ່ພາຍໃນການປັ້ນແຕ່ງຂອງພຣະເຈົ້າ. ມັນຄືລົມຫາຍໃຈແຫ່ງຊີວິດຈາກພຣະເຈົ້າທີ່ສົ່ງເສີມສັບພະທຸກສິ່ງທີ່ມີຊີວິດຕະຫຼອດການເຕີບໂຕຈົນກາຍເປັນຜູ້ໃຫຍ່. ໃນລະຫວ່າງຂະບວນການນີ້ ບໍ່ມີໃຜຮູ້ສຶກວ່າມະນຸດກຳລັງເຕີບໂຕພາຍໃຕ້ການດູແລຂອງພຣະເຈົ້າ; ແຕ່ກົງກັນຂ້າມ ພວກເຂົາເຊື່ອວ່າ ມະນຸດກຳລັງເຕີບໂຕພາຍໃຕ້ການດູແລອັນເປັນທີ່ຮັກຂອງພໍ່ແມ່ຂອງເຂົາ ແລະ ຍ້ອນມັນຄືສັນຊາດຕະຍານແຫ່ງຊີວິດຂອງເຂົາເອງທີ່ຊີ້ນຳການເຕີບໃຫຍ່ຂອງເຂົາ. ນີ້ກໍຍ້ອນວ່າ ມະນຸດບໍ່ຮູ້ຈັກວ່າ ໃຜປະທານຊີວິດ ຫຼື ຊີວິດມາຈາກໃສ, ແຮງໄກທີ່ຈະຮູ້ວິທີທາງທີ່ສັນຊາດຕະຍານແຫ່ງຊີວິດສ້າງສິ່ງອັດສະຈັນ. ເຂົາພຽງແຕ່ຮູ້ຈັກວ່າ ອາຫານຄືພື້ນຖານທີ່ຊີວິດຂອງເຂົາຕ້ອງສືບຕໍ່ໄປ, ຄວາມມານະອົດທົນຄືແຫຼ່ງກຳເນີດຂອງການມີຊີວິດຂອງເຂົາ ແລະ ຄວາມເຊື່ອໃນຈິດໃຈຂອງເຂົາແມ່ນຕົ້ນທຶນທີ່ເປັນບ່ອນເພິ່ງພາໃນການເອົາຕົວລອດຂອງເຂົາ. ສຳລັບພຣະຄຸນ ແລະ ການສະໜອງຂອງພຣະເຈົ້ານັ້ນ ມະນຸດບໍ່ໄດ້ຄຳນຶງເຖິງເລີຍ ແລະ ດ້ວຍເຫດນີ້ ເຂົາຈຶ່ງໃຊ້ຊີວິດທີ່ພຣະເຈົ້າປະທານໃຫ້ພວກເຂົາຢ່າງໄຮ້ຈຸດປະສົງ... ບໍ່ມີແມ່ນແຕ່ມະນຸດຄົນດຽວທີ່ພຣະເຈົ້າດູແລທັງກາງເວັນ ແລະ ກາງຄືນຕັ້ງໃຈນະມັດສະການພຣະອົງ. ພຣະເຈົ້າພຽງແຕ່ສືບຕໍ່ປະຕິບັດພາລະກິດໃນມະນຸດ ຍ້ອນພຣະອົງບໍ່ຄາດຫວັງຫຍັງ ຕາມທີ່ພຣະອົງໄດ້ວາງແຜນໄວ້. ພຣະອົງເຮັດແບບນັ້ນກໍຍ້ອນຫວັງວ່າ ມື້ໜຶ່ງມະນຸດຈະຕື່ນຂຶ້ນຈາກຄວາມຝັນຂອງເຂົາ ແລະ ທັນທີໃດເຂົ້າໃຈເຖິງຄຸນຄ່າ ແລະ ຄວາມໝາຍຂອງຊີວິດ, ລາຄາທີ່ພຣະເຈົ້າໄດ້ຈ່າຍສຳລັບທຸກສິ່ງທີ່ພຣະອົງມອບໃຫ້

ກັບເຂົາ ແລະ ຄວາມເປັນຫ່ວງຢ່າງໜັກທີ່ພຣະເຈົ້າລໍຖ້າໃຫ້ມະນຸດຫັນກັບມາຫາພຣະອົງ. ບໍ່ມີໃຜເຄີຍສຳຫຼວດຄວາມລັບທີ່ປົກຄອງຕົ້ນກຳເນີດ ແລະ ການສືບຕໍ່ມີຊີວິດຂອງມະນຸດເລີຍ. ມີພຽງພຣະເຈົ້າຜູ້ເຊິ່ງເຂົ້າໃຈສິ່ງນີ້ທັງໝົດ ທີ່ອົດທົນຕໍ່ຄວາມເຈັບປວດ ແລະ ການໂຈມຕີຢ່າງງຽບໆຈາກມະນຸດຜູ້ເຊິ່ງໄດ້ຮັບທຸກຢ່າງຈາກພຣະເຈົ້າແຕ່ບໍ່ຮູ້ສຳນຶກບຸນຄຸນ ແລະ ບໍ່ ມອບສິ່ງໃດໃຫ້ກັບພຣະອົງເລີຍ. ມະນຸດມີຄວາມສຸກກັບທຸກສິ່ງທີ່ຊີວິດໄດ້ນຳມາໂດຍປົກກະຕິ ແລະ ໃນທຳນອງດຽວກັນ ມັນແມ່ນ "ເລື່ອງແທ້ແນ່ນອນ" ທີ່ພຣະເຈົ້າຖືກທໍລະຍົດໂດຍມະນຸດ, ຖືກລືມໂດຍມະນຸດ ແລະ ຖືກບີບບັງຄັບໂດຍມະນຸດ. ເປັນໄປໄດ້ບໍ ທີ່ແຜນການຂອງພຣະເຈົ້າຈະສຳຄັນຂະໜາດນັ້ນແທ້? ເປັນໄປໄດ້ບໍ່ທີ່ມະນຸດ ເຊິ່ງເປັນສິ່ງທີ່ມີຊີວິດທີ່ມາຈາກມືຂອງພຣະເຈົ້າ ຈະສຳຄັນຂະໜາດນັ້ນແທ້? ແຜນການຂອງພຣະເຈົ້າແມ່ນສຳຄັນຢ່າງແທ້ແນ່ນອນ; ເຖິງຢ່າງໃດກໍຕາມ ສິ່ງມີຊີວິດທີ່ຖືກສ້າງຂຶ້ນໂດຍກຳມືຂອງພຣະເຈົ້າມີຊີວິດຢູ່ກໍເພື່ອແຜນການຂອງພຣະອົງ. ສະນັ້ນ ພຣະເຈົ້າບໍ່ສາມາດສູນເສຍແຜນການຂອງພຣະອົງຍ້ອນຄວາມກຽດຊັງທີ່ມີຕໍ່ມະນຸດຊາດນີ້. ເພື່ອເຫັນແກ່ແຜນການຂອງພຣະອົງ ແລະ ເພື່ອລົມຫາຍໃຈຂອງພຣະອົງ ພຣະເຈົ້າຈຶ່ງອົດທົນຕໍ່ຄວາມທຸກທໍລະມານທຸກຢ່າງ, ບໍ່ແມ່ນເພື່ອເນື້ອໜັງຂອງມະນຸດ ແຕ່ເພື່ອຊີວິດຂອງມະນຸດ. ພຣະອົງເຮັດແບບນັ້ນບໍ່ແມ່ນເພື່ອນຳເນື້ອໜັງຂອງມະນຸດກັບຄືນມາ ແຕ່ເພື່ອນຳເອົາຊີວິດທີ່ເກີດຈາກລົມຫາຍໃຈຂອງພຣະອົງນັ້ນຄືນມາ. ນີ້ຄືແຜນການຂອງພຣະອົງ.

ທຸກຄົນທີ່ເຂົ້າມາໃນໂລກນີ້ຕ້ອງຜ່ານຊີວິດ ແລະ ຄວາມຕາຍ ແລະ ພວກເຂົາສ່ວນຫຼາຍໄດ້ຜ່ານວົງຈອນແຫ່ງຄວາມຕາຍ ແລະ ການເກີດໃໝ່ທັງນັ້ນ. ຄົນທີ່ມີຊີວິດຢູ່ກໍຈະຕາຍໃນອີກບໍ່ດົນ ແລະຄົນທີ່ຕາຍກໍຈະກັບມາໃນອີກບໍ່ດົນ. ທຸກສິ່ງຢ່າງແມ່ນເສັ້ນທາງແຫ່ງຊີວິດທີ່ໄດ້ຖືກຈັດແຈງໂດຍພຣະເຈົ້າໃຫ້ກັບທຸກສິ່ງທີ່ມີຊີວິດ. ເຖິງຢ່າງໃດກໍຕາມ ເສັ້ນທາງນີ້ ແລະ ວົງຈອນນີ້ແມ່ນຄວາມຈິງທີ່ພຣະເຈົ້າປາຖະໜາຢາກໃຫ້ມະນຸດເຫັນຢ່າງແນ່ນອນ: ຊີວິດທີ່ພຣະເຈົ້າປະທານໃຫ້ກັບມະນຸດແມ່ນບໍ່ມີຈຳກັດ, ເປັນອິດສະຫຼະຈາກດ້ານຮ່າງກາຍ, ເວລາ ຫຼື ອາກາດ. ສິ່ງດັ່ງກ່າວແມ່ນຄວາມລຶກລັບຂອງຊີວິດທີ່ພຣະເຈົ້າປະທານໃຫ້ກັບມະນຸດ ແລະ ເປັນເຄື່ອງພິສູດວ່າ ຊີວິດມາຈາກພຣະອົງ. ເຖິງແມ່ນວ່າຫຼາຍຄົນອາດບໍ່ເຊື່ອວ່າຊີວິດມາຈາກພຣະເຈົ້າ, ມະນຸດກໍມີຄວາມສຸກກັບທຸກສິ່ງທີ່ມາຈາກພຣະເຈົ້າຢ່າງຫຼີກເວັ້ນບໍ່ໄດ້, ບໍ່ວ່າພວກເຂົາຈະເຊື່ອ ຫຼື ປະຕິເສດການມີຢູ່ຂອງພຣະເຈົ້າກໍຕາມ. ຖ້າມື້ໜຶ່ງພຣະເຈົ້າປ່ຽນໃຈກະທັນຫັນ ແລະ ປາຖະໜາທີ່ຈະຮຽກຮ້ອງເອົາທຸກສິ່ງທີ່ເກີດຂຶ້ນໃນໂລກນີ້ກັບຄືນ ແລະເອົາຊີວິດທີ່ພຣະອົງມອບໃຫ້ຄືນມາ ແລ້ວທຸກສິ່ງກໍຈະບໍ່ມີຢູ່ອີກຕໍ່ໄປ. ພຣະເຈົ້າໃຊ້ຊີວິດຂອງພຣະອົງເພື່ອສະໜອງທຸກສິ່ງ ທັງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ, ນຳທຸກຢ່າງມາສູ່ຄວາມເປັນລະບຽບທີ່ດີໂດຍວິທີທາງແຫ່ງລິດທານຸພາບ ແລະ ສິດອຳນາດຂອງພຣະອົງ. ນີ້ຄືຄວາມຈິງທີ່ບໍ່ມີໃຜສາມາດຄົ້ນຄິດຂຶ້ນໄດ້ ຫຼື ເຂົ້າໃຈໄດ້ ແລະ ຄວາມຈິງທີ່ບໍ່ສາມາດເຂົ້າໃຈໄດ້ເຫຼົ່ານີ້ແມ່ນການສະແດງອອກ ແລະ ການປະຈັກພະຍານເຖິງພະລັງຊີວິດຂອງພຣະເຈົ້າ. ບັດນີ້ ເຮົາຈະບອກຄວາມລັບໃຫ້ກັບເຈົ້າ: ຄວາມຍິ່ງໃຫຍ່ຂອງຊີວິດຂອງພຣະເຈົ້າ ແລະ ລິດອຳນາດແຫ່ງຊີວິດຂອງພຣະອົງແມ່ນບໍ່ສາມາດຢັ່ງເຖິງໄດ້ໂດຍສິ່ງຖືກສ້າງໃດໆ. ມັນເປັນແບບນີ້ໃນປັດຈຸບັນ, ດັ່ງທີ່ມັນເປັນໃນອະດີດ ແລະ ມັນກໍຈະເປັນແບບນີ້ໃນ

ອະນາຄົດ. ຄວາມລັບທີສອງທີ່ເຮົາຈະບອກໃຫ້ຮູ້ຄື: ແຫຼ່ງກຳເນີດຊີວິດສຳລັບທຸກສິ່ງທີ່ຖືກສ້າງແມ່ນມາຈາກພຣະເຈົ້າ ບໍ່ວ່າພວກເຂົາຈະມີລັກສະນະຊີວິດ ຫຼື ໂຄງສ້າງທີ່ແຕກຕ່າງກັນກໍຕາມ; ບໍ່ວ່າເຈົ້າຈະເປັນສິ່ງມີຊີວິດປະເພດໃດກໍຕາມ ເຈົ້າບໍ່ສາມາດຝືນເສັ້ນທາງໂຄຈອນແຫ່ງຊີວິດທີ່ພຣະເຈົ້າໄດ້ກຳນົດໄວ້. ຢ່າງໃດກໍຕາມ ທຸກສິ່ງທີ່ເຮົາປາຖະໜາກໍຄືໃຫ້ມະນຸດເຂົ້າໃຈສິ່ງນີ້: ຫາກປາສະຈາກການດູແລ, ການຮັກສາ ແລະ ການຈັດກຽມຂອງພຣະເຈົ້າ, ມະນຸດບໍ່ສາມາດຮັບທຸກສິ່ງທີ່ເຂົາຄວນຈະໄດ້ຮັບ, ບໍ່ວ່າເຂົາຈະພະຍາຍາມຢ່າງພາກພຽນພຽງໃດກໍຕາມ ຫຼື ບໍ່ວ່າເຂົາຈະດີ້ນລົນຢ່າງລຳບາກພຽງໃດກໍຕາມ. ຖ້າປາສະຈາກການສະໜອງຊີວິດຈາກພຣະເຈົ້າ ມະນຸດກໍຈະສູນເສຍຄວາມຮູ້ສຶກແຫ່ງຄຸນຄ່າຂອງການມີຊີວິດ ແລະ ຄວາມຮູ້ສຶກຂອງຄວາມໝາຍໃນຊີວິດ. ພຣະເຈົ້າຈະປ່ອຍໃຫ້ມະນຸດ ຜູ້ທີ່ເຮັດໃຫ້ຊີວິດຂອງພຣະເຈົ້າເສຍຄຸນຄ່າຢ່າງໄຮ້ເຫດຜົນ ລອຍນວນຢູ່ໄດ້ແນວໃດ? ດັ່ງທີ່ເຮົາໄດ້ກ່າວໄປກ່ອນໜ້ານີ້: ຢ່າລືມວ່າພຣະເຈົ້າແມ່ນແຫຼ່ງກຳເນີດຂອງຊີວິດຂອງເຈົ້າ. ຖ້າມະນຸດລົ້ມເຫຼວທີ່ຈະຖະໜອມທຸກສິ່ງທີ່ພຣະເຈົ້າມອບໃຫ້ ບໍ່ພຽງແຕ່ພຣະເຈົ້າຈະເອົາສິ່ງທີ່ພຣະອົງມອບໃຫ້ໃນເບື້ອງຕົ້ນນັ້ນກັບຄືນ ແຕ່ພຣະອົງຈະເຮັດໃຫ້ມະນຸດຈ່າຍຄືນພຣະອົງສອງເທົ່າຂອງລາຄາທັງໝົດທີ່ພຣະອົງໄດ້ມອບໃຫ້.

ວັນທີ 26 ພຶດສະພາ 2003

# ການຄໍ່າຄວນຂອງອົງຊົງລິດທານຸພາບສູງສຸດ

ໃນຫົວໃຈຂອງເຈົ້ານັ້ນມີຄວາມລຶກລັບຢ່າງມະຫາສານ ທີ່ເຈົ້າບໍ່ເຄີຍຮູ້ມາກ່ອນ ຍ້ອນວ່າເຈົ້າດຳລົງຊີວິດຢູ່ໃນໂລກທີ່ຂາດແສງສະຫວ່າງ. ຫົວໃຈ ແລະ ຈິດວິນຍານຂອງເຈົ້າໄດ້ຖືກມານຊົ່ວຮ້າຍແຍ່ງເອົາໄປ. ດວງຕາຂອງເຈົ້າຖືກປິດບັງດ້ວຍຄວາມມືດ ແລະ ເຈົ້າບໍ່ສາມາດເຫັນແສງອາທິດໃນທ້ອງຟ້າ ຫຼື ດວງດາວທີ່ສ່ອງແສງແວວວາວໃນຄໍ່າຄືນ. ຫູຂອງເຈົ້າຖືກອັດດ້ວຍຖ້ອຍຄຳທີ່ຫຼອກລວງ ແລະ ເຈົ້າບໍ່ສາມາດໄດ້ຍິນສຽງຟ້າລັ່ນຂອງພຣະເຢໂຮວາ ຫຼື ສຽງແຫ່ງສາຍນໍ້າທີ່ໄຫຼຈາກບັນລັງ. ເຈົ້າໄດ້ສູນເສຍທຸກສິ່ງທີ່ເປັນຂອງເຈົ້າໂດຍຊອບທຳ ແລະ ເສຍທຸກສິ່ງທີ່ອົງຊົງລິດທານຸພາບສູງສຸດໄດ້ປະທານໃຫ້ເຈົ້າ. ເຈົ້າໄດ້ເຂົ້າສູ່ທະເລແຫ່ງຄວາມທຸກທໍລະມານຢ່າງບໍ່ສິ້ນສຸດ, ບໍ່ມີກຳລັງທີ່ຈະຊ່ວຍເຈົ້າເອງໃຫ້ລອດພົ້ນ, ບໍ່ມີຄວາມຫວັງແຫ່ງການຢູ່ລອດ, ເຈົ້າໄດ້ແຕ່ດີ້ນຣົນ ແລະ ແລ່ນວົກວົນໄປມາ... ແລ້ວຈາກນາທີນັ້ນເປັນຕົ້ນມາ ເຈົ້າກໍຖືກທໍລະມານໂດຍມານຊົ່ວຮ້າຍ, ຢູ່ຮ່າງໄກຈາກພອນຂອງອົງຊົງລິດທານຸພາບສູງສຸດ, ໄກຈາກການດູແລຂອງອົງຊົງລິດທານຸພາບສູງສຸດ ແລະ ກຳລັງຍ່າງຕາມເສັ້ນທາງທີ່ບໍ່ມີວັນຫວນຄືນ. ເອີ້ນຫາເປັນລ້ານຄັ້ງກໍບໍ່ສາມາດປຸກໃຈ ແລະ ຈິດວິນຍານຂອງເຈົ້າໄດ້. ເຈົ້ານອນຫຼັບສະບາຍໃນກຳມືຂອງມານຊົ່ວຮ້າຍ ຜູ້ທີ່ໄດ້ຫຼອກລວງເຈົ້າເຂົ້າສູ່ອານາຈັກທີ່ໄຮ້ຜົນແດນ ໂດຍຂາດທິດທາງ ຫຼື ສິ່ງໝາຍບອກທາງ. ດ້ວຍເຫດນັ້ນ ເຈົ້າຈຶ່ງສູນເສຍຄວາມໄຮ້ດຽງສາ ແລະ ຄວາມບໍລິສຸດດັ່ງເດີມຂອງເຈົ້າ ແລະ ເລີ່ມຫຼີກເວັ້ນການເບິ່ງແຍງຂອງອົງຊົງລິດທານຸພາບສູງສຸດ. ພາຍໃນໃຈຂອງເຈົ້າ ມານຊົ່ວຮ້າຍນຳພາເຈົ້າໃນທຸກເລື່ອງ ແລະ ໄດ້ກາຍເປັນຊີວິດຂອງເຈົ້າ. ເຈົ້າບໍ່ຢ້ານມັນ, ຫຼີກເວັ້ນມັນ ຫຼື ສົງໄສມັນອີກຕໍ່ໄປ; ກົງກັນຂ້າມ ເຈົ້າປະຕິບັດຕໍ່ມັນຄືດັ່ງພຣະເຈົ້າໃນຫົວໃຈຂອງເຈົ້າ. ເຈົ້າເລີ່ມບູຊາ ແລະ ນະມັດສະການເຂົາ ແລະ ພວກເຈົ້າທັງສອງໄດ້ກາຍມາເປັນຮ່າງກາຍ ແລະ ເງົາທີ່ບໍ່ສາມາດແຍກອອກຈາກກັນໄດ້ ໂດຍຍຶດໝັ້ນຕໍ່ກັນວ່າຈະເປັນ ແລະ ຕາຍນຳກັນ. ເຈົ້າບໍ່ຮູ້ວ່າເຈົ້າມາຈາກໃສ, ສາເຫດໃດເຈົ້າຈຶ່ງເກີດມາ ຫຼື ເປັນຫຍັງເຈົ້າຈຶ່ງຕາຍ. ເຈົ້າເບິ່ງອົງຊົງລິດທານຸພາບສູງສຸດຄືດັ່ງຄົນແປກໜ້າ; ເຈົ້າບໍ່ຮູ້ຈັກຕົ້ນກຳເນີດຂອງພຣະອົງ ແລ້ວແຮງໄກທີ່ຈະຮູ້ຈັກທຸກສິ່ງຢ່າງທີ່ພຣະອົງໄດ້ກະທຳເພື່ອເຈົ້າ. ທຸກສິ່ງທີ່ມາຈາກພຣະອົງໄດ້ກາຍເປັນຄວາມກຽດຊັງສຳລັບເຈົ້າ; ເຈົ້າບໍ່ຖະໜຸຖະໜອມມັນ ຫຼື ຮູ້ຈັກຄຸນຄ່າຂອງມັນເລີຍ. ເຈົ້າຍ່າງຄຽງຂ້າງມານຊົ່ວຮ້າຍເລີ່ມຕັ້ງແຕ່ມື້ທີ່ເຈົ້າໄດ້ຮັບການດູແລຂອງອົງຊົງລິດທານຸພາບສູງສຸດ. ເຈົ້າໄດ້ຜ່ານຜ່າຟ້າລົມ ແລະ ພາຍຸກັບມານຊົ່ວຮ້າຍມາເປັນເວລາຫຼາຍພັນປີ ແລະ ເຈົ້າຢືນຮ່ວມກັບມັນເພື່ອຕໍ່ຕ້ານພຣະເຈົ້າຜູ້ຊົງເປັນແຫຼ່ງຊີວິດຂອງເຈົ້າ. ເຈົ້າບໍ່ຮູ້ຈັກຫຍັງກ່ຽວກັບການສຳນຶກຜິດ ຢ່າວ່າແຕ່ເຈົ້າໃກ້ເຖິງຂອບເຂດແຫ່ງຄວາມຕາຍເລີຍ. ເຈົ້າໄດ້ລືມໄປວ່າ ມານຊົ່ວຮ້າຍໄດ້ລໍ້ລວງ ແລະ ທໍລະມານເຈົ້າ; ເຈົ້າໄດ້ລືມຈຸດເລີ່ມຕົ້ນຂອງເຈົ້າ. ດັ່ງນັ້ນ ມານຊົ່ວຮ້າຍຈຶ່ງໄດ້ທໍລະມານເຈົ້າທຸກບາດກ້າວເດີນຈົນເຖິງປັດຈຸບັນນີ້. ຫົວໃຈ ແລະ ຈິດວິນຍານຂອງເຈົ້າແມ່ນມຶນຊາ ແລະ ເນົ່າເປື່ອຍ. ເຈົ້າໄດ້ເຊົາຕໍ່ວ່າກ່ຽວກັບຄວາມວຸ້ນວາຍຂອງໂລກມະນຸດ; ເຈົ້າບໍ່ເຊື່ອວ່າ ໂລກນີ້ບໍ່ຍຸຕິທຳອີກຕໍ່ໄປ ແລ້ວແຮງໄກທີ່ເຈົ້າຈະສົນໃຈວ່າ ອົງຊົງລິດທານຸພາບສູງສຸດນັ້ນມີຢູ່ຈິງ

ຫຼື ບໍ່. ນີ້ກໍຍ້ອນວ່າ ແຕ່ໃດມາ ເຈົ້າຄິດວ່າມານຊົ່ວຮ້າຍຄືບິດາແທ້ຈິງຂອງເຈົ້າ ແລະ ບໍ່ສາມາດໜີຫ່າງຈາກມັນໄດ້. ນີ້ຄືຄວາມລຶກລັບພາຍໃນຫົວໃຈເຈົ້າ.

ເມື່ອຮອດຍາມຮຸ່ງເຊົ້າ ດວງດາວຍາມຮຸ່ງເຊົ້າກໍເລີ່ມທໍແສງຈາກທິດຕາເວັນອອກ. ນີ້ແມ່ນດວງດາວທີ່ບໍ່ເຄີຍມີມາກ່ອນ, ມັນເຍືອງທ້ອງຟ້າທີ່ແວວວາວ ແລະ ງຽບສະຫງັດ ແລະ ໄຕ້ແສງໄຟທີ່ດັບມອດຢູ່ໃນຫົວໃຈຂອງມະນຸດນັ້ນໃຫ້ຮຸ່ງຄືນໃໝ່. ມະນຸດບໍ່ໄດ້ຢູ່ໂດດດ່ຽວອີກຕໍ່ໄປກໍຍ້ອນແສງສະຫວ່າງນີ້ ເຊິ່ງສ່ອງແສງສະຫວ່າງໃຫ້ກັບເຈົ້າ ແລະ ຄົນອື່ນ. ແຕ່ເຈົ້າກໍຍັງຫຼັບນອນຢູ່ໃນຄວາມມືດຂອງກາງຄືນ. ເຈົ້າບໍ່ໄດ້ຍິນສຽງ ແລະ ເຫັນແສງສະຫວ່າງນັ້ນເລີຍ; ເຈົ້າບໍ່ຮູ້ກ່ຽວກັບການກຳເນີດແຫ່ງສະຫວັນ ແລະ ແຜ່ນດິນໂລກໃໝ່ ແລະ ການກຳເນີດແຫ່ງຍຸກໃໝ່ ຍ້ອນວ່າ ບິດາຂອງເຈົ້າບອກເຈົ້າວ່າ "ລູກເຮົາເອີຍ, ຢ່າຕື່ນຂຶ້ນເລີຍ ມັນຍັງເຊົ້າຢູ່. ອາກາດກໍໜາວ ດັ່ງນັ້ນຢ່າໄດ້ອອກໄປຂ້າງນອກ ບໍ່ດັ່ງນັ້ນດວງຕາຂອງເຈົ້າຈະຖືກແທງດ້ວຍດາບ ແລະ ຫອກ". ເຈົ້າເຊື່ອແຕ່ຄຳໂອວາດຂອງບິດາຂອງເຈົ້າ ຍ້ອນເຈົ້າເຊື່ອວ່າ ມີພຽງບິດາຂອງເຈົ້າເທົ່ານັ້ນທີ່ຖືກຕ້ອງ ເພາະບິດາຂອງເຈົ້າເຖົ້າກວ່າເຈົ້າ ແລະ ລາວກໍຮັກເຈົ້າສຸດຫົວໃຈ. ຄຳໂອວາດ ແລະ ຄວາມຮັກດັ່ງກ່າວເຮັດໃຫ້ເຈົ້າເຊົາເຊື່ອໃນຕຳນານທີ່ວ່າ ມີແສງສະຫວ່າງໃນໂລກ; ພວກມັນເຮັດໃຫ້ເຈົ້າບໍ່ສົນໃຈວ່າຄວາມຈິງຍັງມີຢູ່ໃນໂລກນີ້. ເຈົ້າບໍ່ກ້າທີ່ຈະຄາດຫວັງໃຫ້ອົງຊົງລິດທານຸພາບສູງສຸດຊ່ວຍເຫຼືອຊີວິດອີກຕໍ່ໄປ. ເຈົ້າພໍໃຈກັບສະຖານະພາບທີ່ເປັນຢູ່, ເຈົ້າບໍ່ຄາດຫວັງໃນການມາຂອງແສງສະຫວ່າງອີກຕໍ່ໄປ, ເຈົ້າບໍ່ສະແຫວງຫາການສະເດັດມາຂອງອົງຊົງລິດທານຸພາບສູງສຸດຕາມທີ່ຖືກກ່າວໄວ້ໃນຕຳນານອີກຕໍ່ໄປ. ສຳລັບແນວຄິດຂອງເຈົ້າແລ້ວທຸກສິ່ງຢ່າງທີ່ສະຫງ່າງາມແມ່ນບໍ່ສາມາດຟື້ນຟູໄດ້ ເພາະວ່າ ມັນບໍ່ສາມາດດຳລົງຢູ່ໄດ້. ໃນສາຍຕາຂອງເຈົ້າ ມື້ອື່ນຂອງມະນຸດຊາດ ແລະ ອະນາຄົດຂອງມະນຸດຊາດຈະສາບສູນ ແລະ ຖືກທຳລາຍ. ເຈົ້າຈ່ອງດຶງເສື້ອຜ້າຂອງບິດາຂອງເຈົ້າໄວ້ດ້ວຍກຳລັງທັງໝົດທີ່ເຈົ້າມີ, ເຕັມໃຈທີ່ຈະແບ່ງປັນຄວາມຍາກລຳບາກໂດຍຢ້ານຢ່າງເລິກໆວ່າຈະສູນເສຍເພື່ອນຮ່ວມເດີນທາງຂອງເຈົ້າ ແລະ ສູນເສຍທິດທາງແຫ່ງການເດີນທາງໄກຂອງເຈົ້າ. ໂລກແຫ່ງມະນຸດທີ່ກວ້າງໃຫຍ່ໄພສານ ແລະ ມືດມົວນີ້ໄດ້ສ້າງພວກເຈົ້າຫຼາຍຄົນບໍ່ໃຫ້ຢ້ານກົວ ແລະ ມີຄວາມກ້າຫານໃນການປະກອບມີບົດບາດຕ່າງໆໃນໂລກນີ້. ມັນໄດ້ສ້າງ "ນັກຮົບ" ທີ່ບໍ່ຢ້ານກົວຕໍ່ຄວາມຕາຍ. ຍິ່ງໄປກວ່ານັ້ນ ມັນໄດ້ສ້າງກຸ່ມມະນຸດທີ່ເປັນອຳມະພາດ ແລະ ມຶນຊາຫຼາຍກຸ່ມ ທີ່ບໍ່ຮູ້ຈັກຈຸດປະສົງໃນການຊົງສ້າງຂອງຕົນເອງ. ສາຍຕາຂອງອົງຊົງລິດທານຸພາບສູງສຸດສຳຫຼວດທຸກເຜົ່າພັນຂອງມະນຸດຊາດທີ່ໄດ້ຮັບຄວາມທຸກທໍລະມານຢ່າງໜັກ. ສິ່ງທີ່ພຣະອົງໄດ້ຍິນຄືສຽງຮ້ອງໄຫ້ຂອງຜູ້ທີ່ທົນທຸກ, ສິ່ງທີ່ພຣະອົງເຫັນຄືຄວາມບໍ່ລະອາຍໃຈຂອງຜູ້ທີ່ໄດ້ຮັບຄວາມທຸກທໍລະມານ ແລະ ສິ່ງທີ່ພຣະອົງສຳຜັດແມ່ນຄວາມສິ້ນຫວັງ ແລະ ຄວາມກັງວົນຂອງມະນຸດຊາດທີ່ໄດ້ສູນເສຍພຣະຄຸນແຫ່ງຄວາມລອດພົ້ນ. ມະນຸດຊາດປະຕິເສດການດູແລຂອງພຣະອົງ ໂດຍເລືອກເດີນຕາມທາງຂອງພວກເຂົາ ແລະ ພະຍາຍາມຫຼີກເວັ້ນການສຳຫຼວດຈາກສາຍຕາຂອງພຣະອົງ, ເລືອກທີ່ຈະຊີມລົດຊາດຂອງຄວາມຂົມຂື່ນແຫ່ງທະເລເລິກກັບສັດຕູຈົນເຖິງຍົດສຸດທ້າຍ. ມະນຸດຈະບໍ່ໄດ້ຍິນສຽງຄ່ຳຄວນຂອງອົງຊົງລິດທານຸພາບສູງສຸດອີກຕໍ່ໄປ; ອົງຊົງລິດທານຸພາບສູງສຸດຈະບໍ່ເຕັມໃຈດູແລ

ມະນຸດທີ່ໂສກອະນາດຕະກຳນີ້ດ້ວຍມືຂອງພຣະອົງອີກຕໍ່ໄປ. ທຸກຄັ້ງທີ່ພຣະອົງຍຶດຄືນໄດ້ ແລະ ທຸກຄັ້ງພຣະອົງກໍເສຍຄືນໄປ ແລະ ແລ້ວ ແຕ່ລະຄັ້ງ ພຣະອົງກໍຕ້ອງໄດ້ກະທຳພາລະກິດຂອງພຣະອົງຄືນໃໝ່. ຈາກນາທີນັ້ນເປັນຕົ້ນມາ ພຣະອົງເລີ່ມອິດເມື່ອຍ ແລະ ຮູ້ສຶກເບື່ອໜ່າຍ ດັ່ງນັ້ນພຣະອົງຈຶ່ງປ່ອຍວາງພາລະກິດໃນມືຂອງພຣະອົງ ແລະ ເຊົາຍ່າງທ່າມກາງມະນຸດຊາດ... ມະນຸດບໍ່ຮູ້ເຖິງການປ່ຽນແປງເຫຼົ່ານີ້ທັງສິ້ນ, ບໍ່ຮູ້ກ່ຽວກັບການສະເດັດມາ ແລະ ສະເດັດໄປ, ບໍ່ຮູ້ເຖິງຄວາມເສົ້າໃຈ ແລະ ຄວາມໂສກເສົ້າຂອງອົງຊົງລິດທານຸພາບສູງສຸດ.

ທຸກສິ່ງຢ່າງໃນໂລກນີ້ປ່ຽນແປງຢ່າງໄວວາໄປກັບແນວຄິດ ແລະ ພາຍໃຕ້ສາຍຕາຂອງອົງຊົງລິດທານຸພາບສູງສຸດ. ຫຼາຍສິ່ງທີ່ມະນຸດຊາດບໍ່ເຄີຍໄດ້ຍິນ ທັນທີໃດ ກໍປາກົດຂຶ້ນ ແລະ ຫຼາຍສິ່ງທີ່ມະນຸດຊາດໄດ້ຄອບຄອງມາເປັນເວລາດົນນານກໍສູນຫາຍໄປໂດຍບໍ່ຮູ້ສຶກຕົວ. ບໍ່ມີໃຜສາມາດເຂົ້າໃຈຢ່າງເລິກເຊິ່ງວ່າ ອົງຊົງລິດທານຸພາບສູງສຸດຢູ່ທີ່ໃດ ແລ້ວແຮງໄກທີ່ຜູ້ຄົນຈະສາມາດຮູ້ສຶກເຖິງຄວາມປະເສີດ ແລະ ຄວາມຍິ່ງໃຫຍ່ແຫ່ງພະລັງຊີວິດຂອງອົງຊົງລິດທານຸພາບສູງສຸດໄດ້. ພຣະອົງເຂົ້າໃຈໃນສິ່ງທີ່ມະນຸດບໍ່ສາມາດເຂົ້າໃຈໄດ້. ພຣະອົງເປັນຜູ້ປະເສີດແທ້ ເຖິງແມ່ນວ່າພຣະອົງຈະຖືກມະນຸດປະຖິ້ມ, ແຕ່ພຣະອົງກໍຍັງຊ່ວຍມະນຸດໃຫ້ລອດພົ້ນ. ພຣະອົງຮູ້ຈັກຄວາມໝາຍຂອງຊີວິດ ແລະ ຄວາມຕາຍ ແລະ ຍິ່ງໄປກວ່ານັ້ນ ພຣະອົງຮູ້ຈັກກົດເກນຂອງການເປັນຢູ່ທີ່ມະນຸດຊາດທີ່ຖືກສ້າງຄວນປະຕິບັດຕາມ. ພຣະອົງຄືພື້ນຖານແຫ່ງການດຳລົງຢູ່ຂອງມະນຸດຊາດ ແລະ ພຣະອົງແມ່ນພຣະຜູ້ໄຖ່ບາບທີ່ຟື້ນຟູຊີວິດມະນຸດຊາດອີກຄັ້ງ. ພຣະອົງຂົ່ມຫົວໃຈທີ່ເປັນສຸກດ້ວຍຄວາມທຸກ ແລະ ຍໍຫົວໃຈທີ່ເປັນທຸກດ້ວຍຄວາມສຸກ, ທັງໝົດນີ້ກໍເພື່ອພາລະກິດ ແລະ ແຜນການຂອງພຣະອົງ.

ມະນຸດທີ່ເຫີນຮ່າງຈາກການສະໜອງຊີວິດຂອງອົງຊົງລິດທານຸພາບສູງສຸດ ແມ່ນຂາດຄວາມຮູ້ກ່ຽວກັບຈຸດປະສົງຂອງການດຳລົງຢູ່ ແຕ່ເຖິງຢ່າງໃດ ພວກເຂົາກໍຢ້ານກົວຄວາມຕາຍ. ພວກເຂົາປາສະຈາກຄວາມຊ່ວຍເຫຼືອ ແລະ ການສະໜັບສະໜູນ ແຕ່ກໍຍັງລັງເລໃຈທີ່ຈະຫຼັບຕາຂອງພວກເຂົາລົງ ແລະ ພວກເຂົາກຽມພ້ອມທີ່ຈະຍືດເຍື້ອການເປັນຢູ່ທີ່ໄຮ້ຄຸນຄ່າຢູ່ໃນໂລກນີ້ ໂດຍທຳລາຍເນື້ອໜັງຢ່າງໄຮ້ຄວາມຮູ້ສຶກຕໍ່ຈິດວິນຍານຂອງຕົນເອງ. ເຈົ້າດຳລົງຊີວິດຢູ່ດ້ວຍວິທີນີ້, ບໍ່ມີຄວາມຫວັງຄືດັ່ງຄົນອື່ນໆ ທີ່ປາສະຈາກເປົ້າໝາຍ. ມີພຽງພຣະຜູ້ບໍລິສຸດແຫ່ງຕຳນານທີ່ຈະຊ່ວຍຜູ້ຄົນທີ່ຮ້ອງໄຫ້ໃນທ່າມກາງຄວາມທົນທຸກທໍລະມານຂອງຕົນ ແລະ ຜູ້ທີ່ປາຖະໜາຢ່າງຍິ່ງໃນການສະເດັດມາຂອງພຣະອົງ. ເຖິງປັດຈຸບັນນີ້ ຄວາມເຊື່ອດັ່ງກ່າວກໍຍັງບໍ່ໄດ້ຖືກບັນລຸຜົນໃນຜູ້ຄົນທີ່ຂາດສະຕິເຫຼົ່ານັ້ນ. ເຖິງຢ່າງໃດກໍຕາມ ຜູ້ຄົນກໍຍັງສະແຫວງຫາມັນ. ອົງຊົງລິດທານຸພາບສູງສຸດມີຄວາມເມດຕາຕໍ່ຜູ້ຄົນເຫຼົ່ານີ້ ຜູ້ທີ່ໄດ້ຮັບຄວາມທຸກທໍລະມານຢ່າງຮ້າຍແຮງ; ໃນເວລາດຽວກັນນັ້ນ ພຣະອົງກໍເບື່ອໜ່າຍກັບຜູ້ຄົນເຫຼົ່ານີ້ທີ່ໄຮ້ຄວາມຮູ້ສຶກ ເພາະພຣະອົງຕ້ອງໄດ້ລໍຖ້າດົນເກີນໄປສຳລັບຄຳຕອບຈາກມະນຸດ. ພຣະອົງປາຖະໜາເພື່ອຄົ້ນຫາ ແລະ ສະແຫວງຫາຫົວໃຈ ແລະ ຈິດໃຈຂອງເຈົ້າ ເພື່ອນຳເອົານໍ້າ ແລະ ອາຫານມາໃຫ້ກັບເຈົ້າ ເພື່ອປຸກເຈົ້າຕື່ນ ເພື່ອວ່າເຈົ້າຈະບໍ່ໄດ້ຫິວເຂົ້າ ແລະ ຫິວນໍ້າອີກຕໍ່ໄປ. ເມື່ອເຈົ້າເມື່ອຍໃຈ ແລະ ເມື່ອເຈົ້າເລີ່ມຮູ້ສຶກວ່າໂລກນີ້ເຕັມໄປດ້ວຍຄວາມໂດດດ່ຽວ ແລະ ດຽວດາຍ ກໍຈົ່ງຢ່າຫຼົງທາງ ແລະ ຈົ່ງຢ່າ

ຮ້ອງໄຫ້. ພຣະເຈົ້າອົງຊົງລິດທານຸພາບສູງສຸດ ພຣະຜູ້ເບິ່ງແຍງ ຈະຍິນດີອ້ອມກອດເອົາການມາຂອງເຈົ້າທຸກເວລາ. ພຣະອົງເຝົ້າເບິ່ງຢູ່ຄຽງຂ້າງເຈົ້າ ແລະ ລໍຖ້າການກັບຄືນມາຂອງເຈົ້າ. ພຣະອົງລໍຖ້າມື້ທີ່ເຈົ້າໄດ້ຮັບຄວາມຈຳຂອງເຈົ້າຄືນມາຢ່າງກະທັນຫັນ: ເມື່ອເຈົ້າຮູ້ວ່າ ເຈົ້າມາຈາກພຣະເຈົ້າ ແລະ ໃນບາງເວລາໃດໜຶ່ງ ເຈົ້າໄດ້ຫຼົງທາງເດີນ, ໃນບາງເວລາໃດໜຶ່ງ ເຈົ້າໄດ້ເສຍສະຕິເທິງເສັ້ນທາງ ແລະ ໃນບາງເວລາໃດໜຶ່ງ ແມ່ນໄດ້ຮັບເອົາ "ບິດາ" ດັ່ງກ່າວນັ້ນ; ຍິ່ງໄປກວ່ານັ້ນ ເມື່ອເຈົ້າຮູ້ວ່າ ອົງຊົງລິດທານຸພາບສູງສຸດໄດ້ຄອຍເຝົ້າເບິ່ງແຍງ ແລະ ລໍຖ້າຢູ່ທີ່ນັ້ນເປັນເວລາດົນນານເພື່ອການກັບມາຂອງເຈົ້າ. ພຣະອົງໄດ້ເຝົ້າເບິ່ງດ້ວຍຄວາມຫວັງຢ່າງຍິ່ງ ແລະ ລໍຖ້າການຕອບທີ່ປາສະຈາກຄຳຕອບ. ການເຝົ້າເບິ່ງ ແລະ ການລໍຖ້າແມ່ນຢູ່ເໜືອລາຄາໃດໜຶ່ງ ແລະ ພວກມັນແມ່ນເຫັນແກ່ຫົວໃຈ ແລະ ຈິດວິນຍານຂອງມະນຸດ. ບາງເທື່ອ ການເຝົ້າເບິ່ງ ແລະ ການລໍຖ້ານີ້ອາດບໍ່ມີກຳນົດ ແລະ ບາງເທື່ອ ພວກມັນກໍ່ອາດຈະສິ້ນສຸດ. ແຕ່ເຈົ້າຄວນຮູ້ຢ່າງແນ່ນອນວ່າ ຫົວໃຈ ແລະ ຈິດວິນຍານຂອງເຈົ້າຢູ່ໃສໃນປັດຈະບັນ.

ວັນທີ 28 ພຶດສະພາ 2003

# ບົດບັນຍັດບໍລິຫານສິບຂໍ້ ທີ່ຄົນທີ່ພຣະເຈົ້າເລືອກໄວ້ຕ້ອງເຊື່ອຟັງ ໃນຍຸກແຫ່ງລາຊະອານາຈັກ

1. ມະນຸດບໍ່ຄວນສັນລະເສີນຕົນເອງ ຫຼື ຍົກຍ້ອງຕົນເອງ. ເຂົາຄວນນະມັດສະການ ແລະ ສັນລະເສີນພຣະເຈົ້າ.

2. ໃຫ້ເຮັດທຸກສິ່ງທີ່ເປັນປະໂຫຍດຕໍ່ພາລະກິດຂອງພຣະເຈົ້າ ແລະ ບໍ່ເຮັດສິ່ງທີ່ສ້າງຄວາມເສຍຫາຍໃຫ້ກັບຜົນປະໂຫຍດໃນພາລະກິດຂອງພຣະເຈົ້າ. ໃຫ້ປົກປ້ອງພຣະນາມຂອງພຣະເຈົ້າ, ຄຳພະຍານຂອງພຣະເຈົ້າ ແລະ ພາລະກິດຂອງພຣະເຈົ້າ.

3. ເງິນ, ວັດຖຸສິ່ງຂອງ ແລະ ຊັບສິນທັງໝົດໃນຄົວເຮືອນຂອງພຣະເຈົ້າ ແມ່ນເຄື່ອງຖວາຍທີ່ມະນຸດຄວນມອບໃຫ້. ບໍ່ມີຜູ້ໃດອາດມີຄວາມສຸກກັບເຄື່ອງຖວາຍເຫຼົ່ານີ້ນອກຈາກນັກບວດ ແລະ ພຣະເຈົ້າ ຍ້ອນເຄື່ອງຖວາຍຂອງມະນຸດ ແມ່ນມີໄວ້ສຳລັບຄວາມສຸກຂອງພຣະເຈົ້າ. ພຣະເຈົ້າພຽງແຕ່ແບ່ງປັນເຄື່ອງຖວາຍເຫຼົ່ານີ້ກັບນັກບວດເທົ່ານັ້ນ; ບໍ່ມີຜູ້ໃດທີ່ມີຄຸນສົມບັດ ຫຼື ມີສິດທີ່ຈະມີຄວາມສຸກໃນສ່ວນໃດສ່ວນໜຶ່ງຂອງເຄື່ອງຖວາຍເຫຼົ່ານີ້. ເຄື່ອງຖວາຍທັງໝົດຂອງມະນຸດ (ລວມທັງເງິນ ແລະ ວັດຖຸສິ່ງຂອງທີ່ສາມາດນຳໃຊ້) ແມ່ນມອບໃຫ້ພຣະເຈົ້າ, ບໍ່ແມ່ນມອບໃຫ້ມະນຸດ ແລະ ດ້ວຍເຫດນີ້ມະນຸດຈຶ່ງບໍ່ຄວນມີຄວາມສຸກກັບສິ່ງເຫຼົ່ານີ້; ຖ້າມະນຸດຈະມີຄວາມສຸກກັບສິ່ງເຫຼົ່ານີ້, ແລ້ວເຂົາກໍ່ກຳລັງລັກເອົາເຄື່ອງຖວາຍ. ຜູ້ໃດກໍ່ຕາມທີ່ເຮັດສິ່ງນີ້ແມ່ນຢູດາ ເພາະວ່ານອກຈາກຈະເປັນຄົນທໍລະຍົດແລ້ວ ຢູດາຍັງຊ່ວຍຕົນເອງໂດຍການລັກເອົາສິ່ງທີ່ຢູ່ໃນຖົງເງິນນຳອີກ.

4. ມະນຸດມີອຸປະນິໄສທີ່ເສື່ອມຊາມ ແລະ ຍິ່ງໄປກວ່ານັ້ນ ມະນຸດມີອາລົມ. ເມື່ອເປັນເຊັ່ນນັ້ນ, ມັນຈຶ່ງເປັນການຫ້າມຢ່າງເດັດຂາດບໍ່ໃຫ້ສະມາຊິກສອງຄົນ ທີ່ເປັນເພດກົງກັນຂ້າມເຮັດວຽກຮ່ວມກັນຕາມລຳພັງ ເມື່ອກຳລັງຮັບໃຊ້ພຣະເຈົ້າ. ຜູ້ໃດກໍ່ຕາມທີ່ຖືກຄົ້ນພົບວ່າໄດ້ເຮັດແບບນັ້ນແມ່ນຈະຖືກຂັບໄລ່ອອກ ໂດຍບໍ່ມີຂໍ້ຍົກເວັ້ນ.

5. ຢ່າຕັດສິນພຣະເຈົ້າ ຫຼື ສົນທະນາເລື່ອງຕ່າງໆທີ່ກ່ຽວກັບພຣະເຈົ້າຕາມອຳເພີໃຈ. ເຮັດໃນສິ່ງທີ່ມະນຸດຄວນເຮັດ ແລະ ເວົ້າດັ່ງທີ່ມະນຸດຄວນເວົ້າ ແລະ ຢ່າກ້າວກ່າຍຂີດຈຳກັດ ຫຼື ລ່ວງລະເມີດຂອບເຂດ. ໃຫ້ລະວັງຄຳເວົ້າ ແລະ ເອົາໃຈໃສ່ບ່ອນທີ່ເຈົ້າກ້າວໄປ, ເພື່ອຫຼີກເວັ້ນບໍ່ໃຫ້ເຈົ້າປະຕິບັດສິ່ງໃດໜຶ່ງທີ່ລ່ວງເກີນອຸປະນິໄສຂອງພຣະເຈົ້າ.

6. ເຮັດໃນສິ່ງທີ່ມະນຸດຄວນເຮັດ ແລະ ປະຕິບັດພັນທະຂອງເຈົ້າ ແລະ ປະຕິບັດຄວາມຮັບຜິດຊອບຂອງເຈົ້າ ແລະ ຍຶດໝັ້ນກັບໜ້າທີ່ຂອງເຈົ້າ. ຍ້ອນເຈົ້າເຊື່ອໃນພຣະເຈົ້າ, ເຈົ້າກໍ່ຄວນປະກອບສ່ວນຕໍ່ພາລະກິດຂອງພຣະເຈົ້າ; ຖ້າເຈົ້າບໍ່ປະຕິບັດເຊັ່ນນັ້ນ, ແລ້ວເຈົ້າກໍບໍ່ເໝາະທີ່ຈະກິນ ແລະ ດື່ມພຣະທຳຂອງພຣະເຈົ້າ ແລະ ບໍ່ເໝາະສົມທີ່ຈະອາໄສຢູ່ໃນຄົວເຮືອນຂອງພຣະເຈົ້າ.

7. ໃນພາລະກິດ ແລະ ເລື່ອງໃນຄຣິຕະຈັກ ນອກຈາກການເຊື່ອຟັງພຣະເຈົ້າແລ້ວ, ໃຫ້ປະຕິບັດ

ຕາມຄຳສັ່ງຂອງຄົນທີ່ພຣະວິນຍານບໍລິສຸດໃຊ້ໃນທຸກສິ່ງ. ແມ່ນແຕ່ການລະເມີດກົດລະບຽບພຽງແຕ່ໜ້ອຍດຽວກໍ່ບໍ່ສາມາດຍອມຮັບໄດ້. ໃຫ້ເດັດຂາດໃນການປະຕິບັດຂອງເຈົ້າ ແລະ ບໍ່ຕ້ອງວິເຄາະສິ່ງທີ່ຖືກ ຫຼື ຜິດ; ສິ່ງທີ່ຖືກ ຫຼື ຜິດບໍ່ກ່ຽວຫຍັງກັບເຈົ້າ. ເຈົ້າຕ້ອງເຮັດໃຫ້ຕົນເອງສົນໃຈກັບຄວາມເຊື່ອຟັງຢ່າງສົມບູນເທົ່ານັ້ນ.

8. ຜູ້ຄົນທີ່ເຊື່ອໃນພຣະເຈົ້າຄວນເຊື່ອຟັງພຣະເຈົ້າ ແລະ ນະມັດສະການພຣະອົງ. ຢ່າສັນລະເສີນ ຫຼື ນັບຖືບຸກຄົນໃດໜຶ່ງ; ຢ່າວາງພຣະເຈົ້າໄວ້ທີໜຶ່ງ, ຜູ້ຄົນທີ່ເຈົ້າເຄົາລົບມາເປັນທີສອງ ແລະ ຕົນເອງເປັນທີສາມ. ບໍ່ມີຜູ້ໃດຄູ່ຄວນທີ່ຈະມີຕຳແໜ່ງໃນຫົວໃຈຂອງເຈົ້າ ແລະ ເຈົ້າບໍ່ຄວນພິຈາລະນາໃຫ້ຄົນອື່ນ ໂດຍສະເພາະຄົນທີ່ເຈົ້າເຄົາລົບ ມີຄວາມເທົ່າທຽມກັບພຣະເຈົ້າ ຫຼື ສະເໝີພາບກັບພຣະອົງ. ພຣະເຈົ້າແມ່ນຈະບໍ່ຍອມທົນຕໍ່ສິ່ງນີ້.

9. ຮັກສາຄວາມຄິດຂອງເຈົ້າໃຫ້ຢູ່ກ່ຽວກັບວຽກງານຂອງຄຣິດຕະຈັກ. ປະຖິ້ມຄວາມຄາດຫວັງສຳລັບເນື້ອໜັງຂອງເຈົ້າເອງ, ເດັດຂາດກັບເລື່ອງຄອບຄົວ, ອຸທິດຕົນໝົດໃຈຕໍ່ພາລະກິດຂອງພຣະເຈົ້າ ແລະ ວາງພາລະກິດຂອງພຣະເຈົ້າເປັນທີໜຶ່ງ ແລະ ຊີວິດຂອງເຈົ້າເປັນທີສອງ. ນີ້ຄືການປະພຶດທີ່ດີຂອງໄພ່ພົນ.

10. ຍາດພີ່ນ້ອງທີ່ບໍ່ມີຄວາມເຊື່ອ (ລູກຂອງເຈົ້າ, ຜົວ ຫຼື ເມຍຂອງເຈົ້າ, ເອື້ອຍນ້ອງຂອງເຈົ້າ ຫຼື ພໍ່ແມ່ຂອງເຈົ້າ ແລະ ຄົນອື່ນໆ) ບໍ່ຄວນຖືກບັງຄັບໃຫ້ເຂົ້າຮ່ວມຄຣິດຕະຈັກ. ຄົວເຮືອນຂອງພຣະເຈົ້າມີຈຳນວນສະມາຊິກບໍ່ໜ້ອຍ ແລະ ບໍ່ມີຄວາມຈຳເປັນທີ່ຈະຕ້ອງເພີ່ມຈຳນວນຄົນທີ່ບໍ່ມີປະໂຫຍດ. ບໍ່ຄວນນຳພາຜູ້ຄົນທີ່ບໍ່ເຊື່ອຢ່າງເຕັມໃຈເຂົ້າມາໃນຄຣິດຕະຈັກ. ບົດບັນຍັດນີ້ແມ່ນແນໃສ່ທຸກຄົນ. ພວກເຈົ້າຄວນກວດກາ, ຕິດຕາມ ແລະ ເຕືອນກັນກ່ຽວກັບເລື່ອງນີ້; ບໍ່ມີຜູ້ໃດອາດລະເມີດບົດບັນຍັດ. ແມ່ນແຕ່ເມື່ອຍາດພີ່ນ້ອງທີ່ບໍ່ມີຄວາມເຊື່ອໄດ້ເຂົ້າໄປໃນຄຣິດຕະຈັກຢ່າງບໍ່ເຕັມໃຈ, ພວກເຂົາກໍ່ບໍ່ຄວນໄດ້ຮັບໜັງສື ຫຼື ໄດ້ຮັບຊື່ໃໝ່; ຄົນດັ່ງກ່າວບໍ່ແມ່ນຄົນໃນຄົວເຮືອນຂອງພຣະເຈົ້າ ແລະ ທາງເຂົ້າສູ່ຄຣິດຕະຈັກຕ້ອງຖືກຫ້າມດ້ວຍທຸກວິທີທາງທີ່ຈຳເປັນ. ຖ້າເກີດບັນຫາຕໍ່ຄຣິດຕະຈັກເນື່ອງຈາກການບຸກລຸກຂອງມານຮ້າຍ, ແລ້ວເຈົ້າເອງກໍ່ຈະຖືກຂັບໄລ່ອອກ ຫຼື ເຮັດໃຫ້ມີຂໍ້ຈຳກັດຕໍ່ເຈົ້າ. ສະຫຼຸບກໍ່ຄື ທຸກຄົນມີຄວາມຮັບຜິດຊອບໃນເລື່ອງນີ້, ເຈົ້າບໍ່ຄວນປະໝາດ ຫຼື ບໍ່ຄວນໃຊ້ມັນເພື່ອເປັນການແກ້ແຄ້ນສ່ວນຕົວ.

# ພາກພະໜວກ 1
# ການປາກົດຕົວຂອງພຣະເຈົ້າໄດ້ນໍາພາໄປສູ່ຍຸກໃໝ່

ແຜນການຄຸ້ມຄອງຫົກພັນປີຂອງພຣະເຈົ້າກໍາລັງມາເຖິງຈຸດສຸດທ້າຍ ແລະ ປະຕູແຫ່ງອານາຈັກກໍໄດ້ເປີດອອກໃຫ້ກັບທຸກຄົນທີ່ສະແຫວງຫາການປາກົດຕົວຂອງພຣະອົງແລ້ວ. ຮຽນອ້າຍເອື້ອຍນ້ອງຂອງເຮົາ, ພວກເຈົ້າກໍາລັງລໍຖ້າຫຍັງ? ແມ່ນຫຍັງທີ່ພວກເຈົ້າກໍາລັງສະແຫວງຫາ? ພວກເຈົ້າກໍາລັງລໍຖ້າໃຫ້ພຣະເຈົ້າປາກົດຕົວບໍ? ພວກເຈົ້າກໍາລັງຊອກຫາຮອຍພຣະບາດຂອງພຣະອົງບໍ? ຊ່າງຢາກເຫັນການປາກົດຕົວຂອງພຣະເຈົ້າ! ແລ້ວມັນຊ່າງຍາກແທ້ທີ່ຈະຄົ້ນພົບຮອຍພຣະບາດຂອງພຣະເຈົ້າ! ໃນຍຸກນີ້, ໃນໂລກແບບນີ້, ພວກເຮົາຈະຕ້ອງເຮັດແນວໃດເພື່ອເປັນພະຍານເຖິງມື້ທີ່ພຣະເຈົ້າປາກົດຕົວ? ພວກເຮົາຕ້ອງເຮັດແນວໃດເພື່ອຍ່າງໄປພ້ອມກັນກັບບາດກ້າວຂອງພຣະເຈົ້າ? ທຸກຄົນທີ່ກໍາລັງລໍຖ້າໃຫ້ພຣະເຈົ້າປາກົດແມ່ນພົບກັບຄໍາຖາມປະເພດນີ້. ພວກເຈົ້າທັງໝົດໄດ້ພິຈາລະນາເຖິງສິ່ງເຫຼົ່ານີ້ຫຼາຍເທື່ອແຕ່ຜົນໄດ້ຮັບຄືຫຍັງແດ່? ພຣະເຈົ້າປາກົດຕົວຢູ່ໃສ? ຮອຍພຣະບາດຂອງພຣະເຈົ້າຢູ່ທີ່ໃດ? ພວກເຈົ້າໄດ້ຮັບຄໍາຕອບແລ້ວບໍ? ຫຼາຍຄົນຈະຕອບໃນລັກສະນະນີ້: "ພຣະເຈົ້າປາກົດຕົວທ່າມກາງທຸກຄົນທີ່ຕິດຕາມພຣະອົງ ແລະ ຮອຍພຣະບາດຂອງພຣະອົງກໍຢູ່ທ່າມກາງພວກເຮົາ; ມັນງ່າຍແບບນັ້ນເລີຍ!" ໃຜກໍຕາມສາມາດຈັດຫາຄໍາຕອບທີ່ເປັນຫຼັກສູດໄດ້, ແຕ່ພວກເຈົ້າເຂົ້າໃຈບໍ່ວ່າ ການປາກົດຕົວຂອງພຣະເຈົ້າ ຫຼື ຮອຍພຣະບາດຂອງພຣະອົງແມ່ນຫຍັງ? ການປາກົດຕົວຂອງພຣະເຈົ້າໝາຍເຖິງການທີ່ພຣະອົງມາເຖິງແຜ່ນດິນໂລກເພື່ອປະຕິບັດພາລະກິດຂອງພຣະອົງດ້ວຍຕົວເອງ. ດ້ວຍຕົວຕົນ ແລະ ອຸປະນິໄສຂອງພຣະອົງເອງ ແລະ ໃນຮູບລັກສະນະທີ່ພຣະອົງເປັນໂດຍກໍາເນີດ, ພຣະອົງລົງມາຢູ່ທ່າມກາງມະນຸດຊາດເພື່ອປະຕິບັດພາລະກິດແຫ່ງການເລີ່ມຕົ້ນຍຸກໃດໜຶ່ງ ແລະ ສິ້ນສຸດຍຸກໃດໜຶ່ງ. ການປາກົດຕົວແບບນີ້ບໍ່ແມ່ນຮູບແບບຂອງພິທີກໍາ. ມັນບໍ່ແມ່ນໝາຍສໍາຄັນ, ຮູບພາບ, ການອັດສະຈັນ ຫຼື ນິມິດທີ່ຍິ່ງໃຫຍ່ບາງຢ່າງ ແລະ ຍິ່ງເປັນໄປບໍ່ໄດ້ທີ່ມັນຈະເປັນຂະບວນການທາງສາສະໜາປະເພດໃດໜຶ່ງ. ມັນເປັນຄວາມຈິງທີ່ແທ້ຈິງ ແລະ ຕາມຄວາມເປັນຈິງທີ່ທຸກຄົນສາມາດສໍາຜັດ ແລະ ເບິ່ງເຫັນໄດ້. ການປາກົດຕົວແບບນີ້ບໍ່ແມ່ນເພື່ອເຮັດພໍເປັນພິທີ ຫຼື ສໍາລັບການດໍາເນີນການໄລຍະສັ້ນ; ກົງກັນຂ້າມແມ່ນສໍາລັບຂັ້ນຕອນຂອງພາລະກິດໃນແຜນການຄຸ້ມຄອງຂອງພຣະອົງ. ການປາກົດຕົວຂອງພຣະເຈົ້າມີຄວາມໝາຍສະເໝີ ແລະ ມີສ່ວນກ່ຽວຂ້ອງບາງຢ່າງກັບແຜນການຄຸ້ມຄອງຂອງພຣະອົງຢູ່ຕະຫຼອດເວລາ. ສິ່ງທີ່ຖືກເອີ້ນວ່າ ການປາກົດຕົວ ໃນທີ່ນີ້ແມ່ນແຕກຕ່າງຈາກ "ການປາກົດຕົວ" ທີ່ພຣະເຈົ້າຊີ້ນໍາ, ນໍາພາ ແລະ ສ່ອງແສງສະຫວ່າງໃຫ້ກັບມະນຸດຢ່າງສິ້ນເຊີງ. ແຕ່ລະຄັ້ງທີ່ພຣະເຈົ້າປະຕິບັດຂັ້ນຕອນໃນພາລະກິດທີ່ຍິ່ງໃຫຍ່ຂອງພຣະອົງ, ພຣະອົງເປີດເຜີຍຕົວພຣະອົງເອງ. ພາລະກິດນີ້ແມ່ນແຕກຕ່າງຈາກພາລະກິດໃນຍຸກອື່ນໆ. ມະນຸດບໍ່ສາມາດຈິນຕະນາການໄດ້ ແລະ ມະນຸດກໍບໍ່ເຄີຍພົບພໍ້ມາກ່ອນ. ມັນເປັນພາລະກິດທີ່ເລີ່ມຕົ້ນຍຸກໃໝ່ ແລະ ສິ້ນສຸດຍຸກເກົ່າລົງ ແລະ ມັນເປັນຮູບແບບຂອງພາລະກິດທີ່ໃໝ່ ແລະ ໄດ້ຮັບການປັບປຸງເພື່ອຄວາມລອດພົ້ນຂອງມະນຸດຊາດ; ຍິ່ງໄປກວ່ານັ້ນ, ມັນເປັນພາລະກິດ

ທີ່ນຳພາມະນຸດຊາດໄປສູ່ຍຸກໃໝ່. ນີ້ແມ່ນສິ່ງທີ່ການປາກົດຕົວຂອງພຣະເຈົ້າໝາຍເຖິງ.

ເມື່ອພວກເຈົ້າເຂົ້າໃຈແລ້ວວ່າ ການປາກົດຕົວຂອງພຣະເຈົ້າໝາຍເຖິງຫຍັງ, ແລ້ວພວກເຈົ້າຄວນສະແຫວງຫາຮອຍພຣະບາດຂອງພຣະເຈົ້າໄດ້ແນວໃດ? ຄຳຖາມນີ້ແມ່ນອະທິບາຍໄດ້ບໍ່ຍາກເລີຍ ຄຳຕອບກໍຄື: ບໍ່ວ່າພຣະເຈົ້າຈະປາກົດຕົວຢູ່ໃສກໍ່ຕາມ, ພວກເຈົ້າກໍຈະພົບບາດກ້າວຂອງພຣະອົງເຊັ່ນກັນ. ຄຳອະທິບາຍດັ່ງກ່າວເບິ່ງຄືກົງໄປກົງມາ, ແຕ່ມັນບໍ່ໄດ້ງ່າຍທີ່ຈະປະຕິບັດຕາມ, ຍ້ອນຫຼາຍຄົນບໍ່ຮູ້ຈັກວ່າ ພຣະເຈົ້າປາກົດຕົວຢູ່ທີ່ໃດ, ແລ້ວແຮງໄກທີ່ຈະຮູ້ຈັກວ່າ ພຣະອົງປະສົງ ຫຼື ພຣະອົງຄວນປາກົດຕົວພຣະອົງເອງຢູ່ໃສ. ບາງຄົນເຊື່ອຢ່າງບໍ່ຄິດວ່າ ບ່ອນໃດກໍຕາມທີ່ພຣະວິນຍານບໍລິສຸດປະຕິບັດພາລະກິດ, ພຣະເຈົ້າກໍຈະປາກົດຕົວຢູ່ບ່ອນນັ້ນ. ບໍ່ດັ່ງນັ້ນ ພວກເຂົາກໍຈະເຊື່ອວ່າບ່ອນໃດກໍຕາມທີ່ມີຄົນທີ່ມີຊື່ສຽງຫຼາຍ, ພຣະເຈົ້າກໍຈະປາກົດຕົວຢູ່ທີ່ນັ້ນ. ບໍ່ດັ່ງນັ້ນ ພວກເຂົາກໍຈະເຊື່ອວ່າ ບ່ອນໃດກໍຕາມທີ່ມີຜູ້ຄົນທີ່ມີຊື່ສຽງ, ພຣະເຈົ້າກໍຈະປາກົດຕົວຢູ່ທີ່ນັ້ນ. ໃນຊ່ວງເວລານີ້ ໃຫ້ພວກເຮົາປະໄວ້ຄຳຖາມທີ່ວ່າ ຄວາມເຊື່ອດັ່ງກ່າວຖືກ ຫຼື ຜິດ. ເພື່ອອະທິບາຍຄຳຖາມດັ່ງກ່າວ ກ່ອນອື່ນ ພວກເຮົາຕ້ອງມີຈຸດປະສົງທີ່ຊັດເຈນ ນັ້ນກໍຄື: ພວກເຮົາກຳລັງຊອກຫາຮອຍພຣະບາດຂອງພຣະເຈົ້າ. ພວກເຮົາບໍ່ໄດ້ສະແຫວງຫາບຸກຄົນຝ່າຍວິນຍານ, ແລ້ວແຮງໄກທີ່ພວກເຮົາຈະສະແຫວງຫາບຸກຄົນທີ່ມີຊື່ສຽງ; ພວກເຮົາກຳລັງສະແຫວງຫາຮອຍພຣະບາດຂອງພຣະເຈົ້າ. ດ້ວຍເຫດຜົນນີ້ ຍ້ອນພວກເຮົາກຳລັງຊອກຫາຮອຍພຣະບາດຂອງພຣະເຈົ້າ, ມັນໄດ້ເຮັດໃຫ້ພວກເຮົາຈຳເປັນທີ່ຈະຊອກຫາຄວາມປະສົງຂອງພຣະເຈົ້າ, ຫາພຣະທຳຂອງພຣະເຈົ້າ, ຫາຖ້ອຍຄຳຂອງພຣະອົງ, ຍ້ອນວ່າ ບ່ອນໃດກໍຕາມທີ່ພຣະເຈົ້າກ່າວພຣະທຳໃໝ່, ສຽງຂອງພຣະເຈົ້າກໍຢູ່ທີ່ນັ້ນ ແລະ ບ່ອນໃດກໍຕາມທີ່ມີບາດກ້າວຂອງພຣະເຈົ້າ, ການກະທຳຂອງພຣະເຈົ້າກໍຢູ່ທີ່ນັ້ນ. ບ່ອນໃດກໍຕາມທີ່ມີການສຳແດງຂອງພຣະເຈົ້າ, ພຣະເຈົ້າກໍຈະປາກົດຕົວໃນທີ່ນັ້ນ ແລະ ບ່ອນໃດກໍຕາມທີ່ພຣະເຈົ້າປາກົດຕົວ, ຄວາມຈິງ, ຫົນທາງ ແລະ ຊີວິດກໍຈະມີຢູ່ໃນທີ່ນັ້ນ. ໃນການສະແຫວງຫາຮອຍພຣະບາດຂອງພຣະເຈົ້າ, ພວກເຈົ້າໄດ້ເບິ່ງຂ້າມພຣະທຳທີ່ວ່າ "ພຣະເຈົ້າເປັນຄວາມຈິງ, ຫົນທາງ ແລະ ຊີວິດ". ດ້ວຍເຫດນັ້ນ ເຖິງແມ່ນພວກເຂົາໄດ້ຮັບເອົາຄວາມຈິງ ຫຼາຍຄົນກໍບໍ່ເຊື່ອວ່າ ພວກເຂົາໄດ້ຄົ້ນພົບຮອຍພຣະບາດຂອງພຣະເຈົ້າ ແລ້ວແຮງໄກທີ່ພວກເຂົາຈະຮັບຮູ້ເຖິງການປາກົດຕົວຂອງພຣະເຈົ້າ. ມັນຊ່າງເປັນຄວາມຜິດພາດທີ່ຮ້າຍແຮງຫຼາຍ! ການປາກົດຕົວຂອງພຣະເຈົ້າບໍ່ສາມາດກົງກັນກັບແນວຄິດຂອງມະນຸດໄດ້ ແລ້ວແຮງໄກທີ່ພຣະເຈົ້າຈະປາກົດຕົວຕາມຄຳສັ່ງຂອງມະນຸດ. ພຣະເຈົ້າດຳເນີນການຕາມທາງເລືອກຂອງພຣະອົງ ແລະ ຕາມແຜນການຂອງພຣະອົງເອງ ເວລາທີ່ພຣະອົງປະຕິບັດພາລະກິດຂອງພຣະອົງ; ຍິ່ງໄປກວ່ານັ້ນ ພຣະອົງກໍມີຈຸດປະສົງຂອງພຣະອົງເອງ ແລະ ວິທີການຂອງພຣະອົງເອງ. ພາລະກິດຫຍັງກໍຕາມທີ່ພຣະອົງປະຕິບັດ, ພຣະອົງບໍ່ຈຳເປັນຕ້ອງສົນທະນາກັບມະນຸດ ຫຼື ສະແຫວງຫາຄຳປຶກສາຂອງເຂົາ ແລ້ວແຮງໄກທີ່ຈະແຈ້ງໃຫ້ແຕ່ລະຄົນຮູ້ກ່ຽວກັບພາລະກິດຂອງພຣະອົງ. ນີ້ແມ່ນອຸປະນິໄສຂອງພຣະເຈົ້າ ເຊິ່ງທຸກຄົນຄວນຮັບຮູ້. ຖ້າພວກເຈົ້າປາຖະໜາທີ່ຈະເປັນພະຍານເຖິງການປາກົດຕົວຂອງພຣະເຈົ້າ, ເພື່ອຕິດຕາມບາດກ້າວຂອງພຣະເຈົ້າ, ກ່ອນອື່ນ ພວກເຈົ້າກໍຕ້ອງປະຖິ້ມແນວຄິດຂອງພວກເຈົ້ານັ້ນກ່ອນ. ພວກເຈົ້າ

ຕ້ອງບໍ່ຮຽກຮ້ອງໃຫ້ພຣະເຈົ້າເຮັດນັ້ນເຮັດນີ້ ຍິ່ງໄປກວ່ານັ້ນພວກເຈົ້າບໍ່ຄວນວາງພຣະອົງໃຫ້ຢູ່ພາຍໃນຂອບເຂດຂອງພວກເຈົ້າ ແລະ ຈຳກັດພຣະອົງໃນແນວຄິດຂອງພວກເຈົ້າເອງ. ກົງກັນຂ້າມ ພວກເຈົ້າຄວນຮຽກຮ້ອງຕົນເອງວ່າ ພວກເຈົ້າຄວນສະແຫວງຫາຮອຍພຣະບາດຂອງພຣະເຈົ້າໄດ້ແນວໃດ, ພວກເຈົ້າຄວນຍອມຮັບການປາກົດຕົວຂອງພຣະເຈົ້າໄດ້ແນວໃດ ແລະ ພວກເຈົ້າຄວນຍອມຕາມພາລະກິດໃໝ່ຂອງພຣະເຈົ້າໄດ້ແນວໃດ: ນີ້ຄືສິ່ງທີ່ມະນຸດຄວນກະທຳ. ຍ້ອນມະນຸດບໍ່ແມ່ນຄວາມຈິງ ແລະ ບໍ່ໄດ້ປະກອບດ້ວຍຄວາມຈິງ, ເຂົາຄວນສະແຫວງຫາ, ຍອມຮັບ ແລະ ເຊື່ອຟັງ.

ບໍ່ວ່າເຈົ້າຈະເປັນຊາວອາເມຣິກາ, ຊາວອັງກິດ ແລະ ຊົນຊາດອື່ນໆ, ເຈົ້າຄວນກ້າວອອກຈາກຂອບເຂດແຫ່ງຊົນຊາດຂອງເຈົ້າເອງ, ຢູ່ເໜືອຕົວເຈົ້າເອງ ແລະ ເບິ່ງພາລະກິດຂອງພຣະເຈົ້າຈາກຕຳແໜ່ງຂອງສິ່ງມີຊີວິດທີ່ຖືກສ້າງ. ໃນລັກສະນະນີ້, ເຈົ້າຈະບໍ່ວາງຂໍ້ຈຳກັດຕ່າງໆກ່ຽວກັບຮອຍພຣະບາດຂອງພຣະເຈົ້າ. ນີ້ກໍຍ້ອນວ່າ ໃນປັດຈຸບັນນີ້ ຫຼາຍຄົນໄດ້ຄິດວ່າ ມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະປາກົດຕົວໃນຊົນຊາດສະເພາະໃດໜຶ່ງ ຫຼື ທ່າມກາງຜູ້ຄົນໃດໜຶ່ງ. ຄວາມໝາຍຂອງພາລະກິດຂອງພຣະເຈົ້າຊ່າງເລິກເຊິ່ງ ແລະ ການປາກົດຕົວຂອງພຣະອົງຊ່າງສຳຄັນ! ແນວຄິດ ແລະ ຄວາມຄິດຂອງມະນຸດຈະສາມາດໃຊ້ມາດຕະການໄດ້ແນວໃດ? ເຮົາຂໍເວົ້າວ່າ ເຈົ້າຄວນເອົາຊະນະແນວຄິດກ່ຽວກັບຊົນຊາດ ແລະ ເຊື້ອຊາດຂອງເຈົ້າໃຫ້ໄດ້ເພື່ອສະແຫວງຫາການປາກົດຕົວຂອງພຣະເຈົ້າ. ມີພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ ເຈົ້າຈຶ່ງຈະບໍ່ຖືກຈຳກັດດ້ວຍແນວຄິດຂອງເຈົ້າເອງ; ມີພຽງແຕ່ດ້ວຍວິທີນີ້ເທົ່ານັ້ນ ເຈົ້າຈຶ່ງຈະມີຄຸນສົມບັດເພື່ອຍິນດີຮັບເອົາການປາກົດຕົວຂອງພຣະເຈົ້າ. ບໍ່ດັ່ງນັ້ນ ເຈົ້າກໍຈະຄົງຢູ່ໃນຄວາມມືດຕະຫຼອດໄປເປັນນິດ ແລະ ບໍ່ໄດ້ຮັບການເຫັນດີຈາກພຣະເຈົ້າຈັກເທື່ອ.

ພຣະເຈົ້າເປັນພຣະເຈົ້າຂອງມະນຸດຊາດທັງໝົດ. ພຣະອົງບໍ່ໄດ້ເຫັນວ່າ ພຣະອົງເອງເປັນຊັບສິນສ່ວນຕົວຂອງຊົນຊາດ ຫຼື ຜູ້ຄົນໃດໜຶ່ງ, ແຕ່ເລີ່ມປະຕິບັດພາລະກິດຕາມຂອງພຣະອົງທີ່ພຣະອົງໄດ້ວາງແຜນໄວ້, ບໍ່ຖືກຈຳກັດໃນຮູບການ, ຊົນຊາດ ຫຼື ຜູ້ຄົນໃດໜຶ່ງ. ບາງເທື່ອ ເຈົ້າບໍ່ເຄີຍຈິນຕະນາການເຖິງຮູບແບບນີ້ ຫຼື ບາງເທື່ອ ທ່າທີຂອງເຈົ້າກ່ຽວກັບຮູບແບບນີ້ແມ່ນການປະຕິເສດ ຫຼື ບາງເທື່ອ ຊົນຊາດທີ່ພຣະເຈົ້າເປີດເຜີຍຕົວພຣະອົງເອງ ແລະ ຜູ້ຄົນທີ່ພຣະອົງເປີດເຜີຍຕົວພຣະອົງເອງໃຫ້ເຫັນນັ້ນ ອາດຖືກທຸກຄົນແບ່ງແຍກ ແລະ ອາດເປັນຄົນທີ່ຫຼ້າຫຼັງທີ່ສຸດເທິງແຜ່ນດິນໂລກ. ເຖິງຢ່າງໃດກໍຕາມ ພຣະເຈົ້າມີສະຕິປັນຍາຂອງພຣະອົງ. ດ້ວຍລິດອຳນາດທີ່ຍິ່ງໃຫຍ່ຂອງພຣະອົງ ແລະ ດ້ວຍວິທີແຫ່ງຄວາມຈິງຂອງພຣະອົງ ແລະ ອຸປະນິໄສຂອງພຣະອົງ, ພຣະອົງໄດ້ຮັບເອົາກຸ່ມຄົນທີ່ຢູ່ໃນຄວາມຄິດດຽວກັບພຣະອົງຢ່າງແທ້ຈິງ ແລະ ກຸ່ມຄົນທີ່ພຣະອົງປາຖະໜາທີ່ຈະເຮັດໃຫ້ສຳເລັດ ນັ້ນກໍຄື ກຸ່ມທີ່ຖືກພຣະອົງເອົາຊະນະ ແລະ ໄດ້ອົດທົນຕໍ່ການທົດລອງ ແລະ ຄວາມຫຍຸ້ງຍາກລຳບາກທຸກປະການ ແລະ ການຂົ່ມເຫັງທຸກປະເພດ ຈະສາມາດຕິດຕາມພຣະອົງໄປຈົນເຖິງທີ່ສຸດໄດ້. ຈຸດປະສົງຂອງການປາກົດຕົວຂອງພຣະເຈົ້າ ເຊິ່ງບໍ່ຖືກຈຳກັດໃນຮູບການໃດໜຶ່ງ ຫຼື ຊົນຊາດໃດໜຶ່ງ ກໍ່ແມ່ນເພື່ອໃຫ້ພຣະອົງເຮັດສຳເລັດພາລະກິດຕາມທີ່ພຣະອົງໄດ້ວາງແຜນໄວ້. ສິ່ງນີ້ເໝືອນກັບຕອນທີ່ພຣະເຈົ້າກາຍເປັນມະນຸດໃນແຂວງຢູດາຍ: ຈຸດປະສົງຂອງພຣະອົງແມ່ນເພື່ອເຮັດໃຫ້ພາລະກິດແຫ່ງການຖືກຄຶງທີ່

ໄມ້ກາງແຂນເພື່ອໄຖ່ບາບຂອງມະນຸດຊາດທັງໝົດສຳເລັດລົງ. ເຖິງຢ່າງໃດກໍຕາມ ຊາວຢິວເຊື່ອວ່າ ມັນເປັນໄປບໍ່ໄດ້ສຳລັບພຣະເຈົ້າທີ່ຈະກະທຳສິ່ງນີ້ ແລະ ພວກເຂົາຄິດວ່າ ມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະສາມາດກາຍມາເປັນມະນຸດ ແລະ ປາກົດໃນຮູບຮ່າງຂອງພຣະເຢຊູເຈົ້າ. "ຄວາມເປັນໄປບໍ່ໄດ້" ຂອງພວກເຂົາໄດ້ກາຍມາເປັນພື້ນຖານທີ່ພວກເຂົາຕັດສິນລົງໂທດ ແລະ ຕໍ່ຕ້ານພຣະເຈົ້າ ແລະ ນຳໄປສູ່ການທຳລາຍອິດສະຣາເອນໃນທີ່ສຸດ. ໃນປັດຈຸບັນ, ຫຼາຍຄົນໄດ້ກະທຳຄວາມຜິດພາດແບບດຽວກັນ. ພວກເຂົາປະກາດດ້ວຍກຳລັງທັງໝົດຂອງພວກເຂົາເຖິງການປາກົດຕົວຂອງພຣະເຈົ້າທີ່ກຳລັງຈະເກີດຂຶ້ນ, ແຕ່ໃນເວລາດຽວກັນກໍຕັດສິນລົງໂທດການປາກົດຕົວຂອງພຣະອົງ; "ຄວາມເປັນໄປບໍ່ໄດ້" ຂອງພວກເຂົາໄດ້ຈຳກັດການປາກົດຕົວຂອງພຣະເຈົ້າອີກຄັ້ງ ໃຫ້ຢູ່ພາຍໃນຂອບເຂດຈິນຕະນາການຂອງພວກເຂົາ. ດ້ວຍເຫດນັ້ນ ເຮົາຈຶ່ງເຫັນຫຼາຍຄົນຮ້ອງໂຮຫົວຂວັນຢ່າງຄຶກຄື້ນ ແລະ ຟົດຟື້ນຫຼັງຈາກທີ່ໄດ້ຮຽນຮູ້ເຖິງພຣະທຳຂອງພຣະເຈົ້າ. ສຽງຫົວຂວັນນີ້ໄດ້ແຕກຕ່າງຈາກການຕັດສິນລົງໂທດ ແລະ ການໝິ່ນປະໝາດຂອງຊາວຢິວບໍ? ພວກເຈົ້າບໍ່ມີຄວາມເຄົາລົບນັບຖືໃນການສະຖິດແຫ່ງຄວາມຈິງ, ແລ້ວແຮງໄກທີ່ພວກເຈົ້າຈະມີທ່າທີໃນການສະແຫວງຫາ. ສິ່ງດຽວທີ່ພວກເຈົ້າເຮັດກໍຄືການສຶກສາຢ່າງບໍ່ຈຳແນກ ແລະ ລໍຖ້າຢ່າງບໍ່ຫ່ວງໃຍຫຍັງເລີຍ. ພວກເຈົ້າຈະສາມາດໄດ້ຮັບຫຍັງແດ່ຈາກການສຶກສາ ແລະ ລໍຖ້າແບບນີ້? ພວກເຈົ້າຄິດວ່າພວກເຈົ້າຈະໄດ້ຮັບການຊີ້ນຳເປັນການສ່ວນຕົວຈາກພຣະເຈົ້າບໍ? ຖ້າເຈົ້າບໍ່ສັງເກດຖ້ອຍຄຳຂອງພຣະເຈົ້າ, ເຈົ້າຈະມີຄຸນສົມບັດຫຍັງທີ່ຈະເປັນພະຍານໃຫ້ກັບການປາກົດຕົວຂອງພຣະເຈົ້າ? ບ່ອນໃດກໍຕາມທີ່ພຣະເຈົ້າປາກົດຕົວ, ຄວາມຈິງກໍຈະສຳແດງອອກໃນບ່ອນນັ້ນ ແລະ ສຽງຂອງພຣະເຈົ້າກໍຈະຢູ່ບ່ອນນັ້ນ. ມີພຽງແຕ່ຄົນທີ່ສາມາດຍອມຮັບຄວາມຈິງທີ່ສາມາດໄດ້ຍິນສຽງຂອງພຣະເຈົ້າໄດ້ ແລະ ມີພຽງແຕ່ຄົນແບບນີ້ເທົ່ານັ້ນຈຶ່ງມີຄຸນສົມບັດເປັນພະຍານໃນການປາກົດຕົວຂອງພຣະເຈົ້າໄດ້. ຈົ່ງປະຖິ້ມແນວຄິດຂອງເຈົ້າ! ຈົ່ງສະຫງົບຕົນເອງລົງ ແລະ ອ່ານພຣະທຳເຫຼົ່ານີ້ຢ່າງລະມັດລະວັງ. ຖ້າເຈົ້າປາຖະໜາຫາຄວາມຈິງ, ພຣະເຈົ້າຈະສ່ອງແສງສະຫວ່າງໃຫ້ກັບເຈົ້າ ແລະ ເຈົ້າຈະເຂົ້າໃຈຄວາມປະສົງຂອງພຣະອົງ ແລະ ພຣະທຳຂອງພຣະອົງ. ຈົ່ງປ່ອຍຖິ້ມຄວາມຄິດເຫັນຂອງພວກເຈົ້າກ່ຽວກັບ "ຄວາມເປັນໄປບໍ່ໄດ້"! ຍິ່ງຜູ້ຄົນເຊື່ອວ່າ ບາງສິ່ງເປັນໄປບໍ່ໄດ້ຫຼາຍສໍ່າໃດ, ສິ່ງນັ້ນກໍຍິ່ງມີຄວາມເປັນໄປໄດ້ທີ່ຈະເກີດຂຶ້ນຫຼາຍສໍ່ານັ້ນ, ຍ້ອນສະຕິປັນຍາຂອງພຣະເຈົ້າບິນສູງກວ່າສະຫວັນ, ຄວາມຄິດຂອງພຣະເຈົ້າກໍສູງສົ່ງກວ່າຄວາມຄິດຂອງມະນຸດ ແລະ ພາລະກິດຂອງພຣະເຈົ້າກໍຢູ່ເໜືອຂອບເຂດຄວາມຄິດ ແລະ ແນວຄິດຂອງມະນຸດ. ຍິ່ງບາງສິ່ງເປັນໄປບໍ່ໄດ້ຫຼາຍສໍ່າໃດ, ມັນກໍຍິ່ງມີຄວາມຈິງທີ່ສາມາດສະແຫວງຫາໄດ້ຫຼາຍສໍ່ານັ້ນ; ຍິ່ງບາງສິ່ງຢູ່ເໜືອແນວຄິດ ແລະ ຈິນຕະນາການຂອງມະນຸດຫຼາຍສໍ່າໃດ, ມັນກໍ່ມີຄວາມປະສົງຂອງພຣະເຈົ້າຫຼາຍສໍ່ານັ້ນ. ນີ້ກໍຍ້ອນວ່າ ບໍ່ວ່າພຣະອົງຈະເປີດເຜີຍຕົວພຣະອົງເອງຢູ່ບ່ອນໃດກໍຕາມ, ພຣະເຈົ້າກໍຍັງຄົງເປັນພຣະເຈົ້າ ແລະ ແກ່ນແທ້ຂອງພຣະອົງບໍ່ປ່ຽນແປງໄປຕາມສະຖານທີ່ ຫຼື ຮູບລັກສະນະຂອງການປາກົດຕົວຂອງພຣະອົງ. ອຸປະນິໄສຂອງພຣະເຈົ້າຈະຍັງຄົງເໝືອນເດີມ ບໍ່ວ່າຮອຍພຣະບາດຂອງພຣະອົງຈະຢູ່ບ່ອນໃດກໍຕາມ ແລະ ບໍ່ວ່າຮອຍພຣະບາດຂອງພຣະເຈົ້າຈະຢູ່ທີ່ໃດ, ພຣະອົງກໍເປັນພຣະເຈົ້າຂອງມະນຸດຊາດທັງປວງ,

ເໝືອນດັ່ງພຣະເຢຊູເຈົ້າ ພຣະອົງບໍ່ໄດ້ເປັນພຽງພຣະເຈົ້າຂອງຊາວອິດສະຣາເອນ, ແຕ່ຍັງເປັນພຣະເຈົ້າຂອງທຸກຄົນໃນອາຊີ, ເອີຣົບ ແລະ ອາເມຣິກາອີກດ້ວຍ ແລະ ຍິ່ງໄປກວ່ານັ້ນ ພຣະອົງເປັນພຣະເຈົ້າອົງດຽວເທົ່ານັ້ນໃນຈັກກະວານທັງປວງ. ສະນັ້ນ ໃຫ້ພວກເຮົາສະແຫວງຫາຄວາມປະສົງຂອງພຣະເຈົ້າ ແລະ ຄົ້ນພົບການປາກົດຕົວຂອງພຣະອົງໃນພຣະທຳຂອງພຣະອົງ ແລະ ກ້າວເດີນໄປພ້ອມກັນກັບບາດກ້າວຂອງພຣະອົງ! ພຣະເຈົ້າເປັນຄວາມຈິງ, ຫົນທາງ ແລະ ຊີວິດ. ພຣະທຳຂອງພຣະອົງ ແລະ ການປາກົດຕົວຂອງພຣະອົງເກີດຂຶ້ນພ້ອມກັນ; ອຸປະນິໄສ ແລະ ຮອຍພຣະບາດຂອງພຣະອົງເປີດເຜີຍໃຫ້ກັບມະນຸດຊາດໄດ້ທຸກເວລາ. ດັ່ງນັ້ນ, ເຖິງອ້າຍເອື້ອຍນ້ອງຂອງເຮົາ, ເຮົາຫວັງວ່າ ພວກເຈົ້າຈະສາມາດເຫັນການປາກົດຕົວຂອງພຣະເຈົ້າໃນພຣະທຳເຫຼົ່ານີ້, ເລີ່ມຕົ້ນຕິດຕາມຮອຍບາດກ້າວຂອງພຣະອົງ ໃນຂະນະທີ່ພວກເຈົ້າກຳລັງກ້າວຂ້າມໄປສູ່ຍຸກໃໝ່ ແລະ ເຂົ້າສູ່ສະຫວັນ ແລະ ແຜ່ນດິນໂລກໃໝ່ທີ່ສວຍງາມ ເຊິ່ງພຣະເຈົ້າໄດ້ຈັດກຽມໄວ້ໃຫ້ກັບພວກເຈົ້າ ແລະ ຜູ້ຄົນທີ່ລໍຖ້າການປາກົດຂອງພຣະອົງ!

# ພາກພະໜວກ 2
# ພຣະເຈົ້າຊົງຄຸ້ມຄອງ
# ຢູ່ເໜືອຊະຕາກຳຂອງມະນຸດຊາດທັງມວນ

ໃນຖານະທີ່ເປັນສະມາຊິກຂອງຊົນຊາດມະນຸດ ແລະ ຄຣິດສະຕຽນທີ່ເຫຼື້ອມໃສສັດທາ, ມັນຄືຄວາມຮັບຜິດຊອບ ແລະ ພັນທະຂອງພວກເຮົາທຸກຄົນທີ່ຈະຖວາຍຈິດໃຈ ແລະ ຮ່າງກາຍຂອງພວກເຮົາເພື່ອບັນລຸຕາມການມອບໝາຍຂອງພຣະເຈົ້າ, ຍ້ອນການເປັນຢູ່ທັງໝົດຂອງພວກເຮົາແມ່ນມາຈາກພຣະເຈົ້າ ແລະ ມັນດຳລົງຢູ່ໄດ້ຍ້ອນອຳນາດອະທິປະໄຕຂອງພຣະເຈົ້າ. ຖ້າຈິດໃຈ ແລະ ຮ່າງກາຍຂອງພວກເຮົາບໍ່ແມ່ນເພື່ອການມອບໝາຍຂອງພຣະເຈົ້າ ແລະ ບໍ່ແມ່ນເພື່ອຈຸດປະສົງທີ່ຊອບທຳຂອງມະນຸດຊາດ ແລ້ວຈິດວິນຍານຂອງພວກເຮົາກໍຈະຮູ້ສຶກບໍ່ສົມຄວນແກ່ຜູ້ຄົນທີ່ຍອມເສຍສະຫຼະຊີວິດເພື່ອການມອບໝາຍຂອງພຣະເຈົ້າ ແລະ ຍິ່ງໄປກວ່ານັ້ນກໍບໍ່ສົມຄວນແກ່ພຣະເຈົ້າ ຜູ້ເຊິ່ງຈັດກຽມທຸກສິ່ງທຸກຢ່າງໃຫ້ກັບພວກເຮົາ.

ພຣະເຈົ້າໄດ້ສ້າງໂລກນີ້, ພຣະອົງໄດ້ສ້າງມະນຸດຊາດນີ້ ແລະ ຍິ່ງໄປກວ່ານັ້ນ ພຣະອົງເປັນຜູ້ສ້າງວັດທະນະທຳຂອງຊາວເກຣັກບູຮານ ແລະ ອາລິຍະທຳຂອງມະນຸດ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ປອບໂຍນມະນຸດຊາດນີ້ ແລະ ມີພຽງພຣະເຈົ້າເທົ່ານັ້ນທີ່ດູແລມະນຸດຊາດທັງກາງຄືນ ແລະ ກາງເວັນ. ການພັດທະນາ ແລະ ຄວາມກ້າວໜ້າຂອງມະນຸດແມ່ນບໍ່ສາມາດແຍກອອກຈາກອຳນາດອະທິປະໄຕຂອງພຣະເຈົ້າໄດ້ ແລະ ປະຫວັດສາດ ແລະ ອະນາຄົດຂອງມະນຸດຊາດບໍ່ສາມາດໜີລອດຈາກແບບແຜນຂອງພຣະເຈົ້າໄດ້. ຖ້າເຈົ້າເປັນຄຣິດສະຕຽນທີ່ແທ້ຈິງ ແລ້ວເຈົ້າກໍຈະເຊື່ອຢ່າງແນ່ນອນວ່າຄວາມຈະເລີນຮຸ່ງເຮືອງ ແລະ ຄວາມຫຼົ້ມຈົມຂອງປະເທດ ຫຼື ຊົນຊາດໃດກໍຕາມແມ່ນເກີດຂຶ້ນຕາມແບບແຜນຂອງພຣະເຈົ້າ. ພຣະເຈົ້າເທົ່ານັ້ນທີ່ຮູ້ຈັກຊະຕາກຳຂອງປະເທດຊາດ ຫຼື ຊົນຊາດໄດ້ ແລະ ພຣະເຈົ້າເທົ່ານັ້ນທີ່ຄວບຄຸມວິທີທາງຂອງມະນຸດຊາດນີ້ໄດ້. ຖ້າມະນຸດຊາດປາຖະໜາທີ່ຈະມີຊະຕາກຳທີ່ດີ, ຖ້າປະເທດໃດໜຶ່ງປາຖະໜາທີ່ຈະມີຊະຕາກຳທີ່ດີ ແລ້ວມະນຸດຕ້ອງກົ້ມລົງນະມັດສະການພຣະເຈົ້າ, ສຳນຶກຜິດ ແລະ ສາລະພາບບາບຕໍ່ໜ້າພຣະເຈົ້າ ຫຼື ບໍ່ດັ່ງນັ້ນ ຊະຕາກຳ ແລະ ຈຸດໝາຍປາຍທາງຂອງມະນຸດຈະເປັນຄວາມຫາຍະນະທີ່ບໍ່ສາມາດຫຼີກລ່ຽງໄດ້ຢ່າງແນ່ນອນ.

ໃຫ້ຫວນກັບໄປເບິ່ງໃນຊ່ວງເວລາເມື່ອໂນອາສ້າງເຮືອສຳເພົາ: ມະນຸດຊາດເສື່ອມຊາມຫຼາຍ, ຜູ້ຄົນໄດ້ຫັນໜີຈາກການອວຍພອນຂອງພຣະເຈົ້າ, ພຣະເຈົ້າບໍ່ໄດ້ດູແລພວກເຂົາອີກຕໍ່ໄປ ແລະ ພວກເຂົາໄດ້ສູນເສຍພຣະສັນຍາຂອງພຣະເຈົ້າ. ພວກເຂົາອາໄສຢູ່ໃນຄວາມມືດ ໂດຍປາສະຈາກແສງສະຫວ່າງຂອງພຣະເຈົ້າ. ສະນັ້ນ ພວກເຂົາຈຶ່ງປາສະຈາກສິນລະທຳໂດຍທຳມະຊາດ ແລະ ປະຖິ້ມຕົວພວກເຂົາເອງໃຫ້ກັບຄວາມຊົ່ວຊ້າຢ່າງເສື່ອມເສຍ. ຄົນປະເພດນີ້ບໍ່ສາມາດຮັບພຣະສັນຍາຂອງພຣະເຈົ້າອີກຕໍ່ໄປ; ພວກເຂົາບໍ່ສົມຄວນເປັນພະຍານເຖິງໃບໜ້າຂອງພຣະເຈົ້າ ຫຼື ໄດ້ຍິນສຽງຂອງພຣະເຈົ້າ, ຍ້ອນພວກເຂົາໄດ້ປະຖິ້ມພຣະເຈົ້າ, ໄດ້ປະຖິ້ມທຸກຢ່າງທີ່ພຣະອົງປະທານໃຫ້ກັບພວກເຂົາ ແລະ ໄດ້ລືມ

ຄຳສັ່ງສອນຂອງພຣະເຈົ້າ. ຫົວໃຈຂອງພວກເຂົາໄດ້ຫັນໜີຈາກພຣະເຈົ້າໄກອອກໄປເລື້ອຍໆ ແລະ ເມື່ອເປັນດັ່ງນັ້ນ ພວກເຂົາຈຶ່ງໄດ້ກາຍມາເປັນຄົນທີ່ຊົ່ວຊ້າເກີນເຫດຜົນທັງໝົດ ແລະ ຄວາມເປັນມະນຸດ ແລະ ຍິ່ງຊົ່ວຮ້າຍເພີ່ມຂຶ້ນເລື້ອຍໆ. ແລ້ວພວກເຂົາກໍ່ໄດ້ຍ່າງເຂົ້າໃກ້ຄວາມຕາຍຫຼາຍຂຶ້ນ ແລະ ຕົກຢູ່ພາຍໃຕ້ຄວາມໂກດຮ້າຍ ແລະ ການລົງໂທດຂອງພຣະເຈົ້າ. ມີພຽງແຕ່ໂນອາທີ່ນະມັດສະການພຣະເຈົ້າ ແລະ ຫຼີກຫຼີກສິ່ງຊົ່ວຮ້າຍ ແລະ ດ້ວຍເຫດນັ້ນ ເພິ່ນຈຶ່ງສາມາດໄດ້ຍິນສຽງຂອງພຣະເຈົ້າ ແລະ ໄດ້ຍິນຄຳສັ່ງສອນຂອງພຣະອົງ. ເພິ່ນໄດ້ສ້າງເຮືອສຳເພົາຕາມຄຳສັ່ງແຫ່ງພຣະທຳຂອງພຣະເຈົ້າ ແລະ ຮວບຮວມສິ່ງທີ່ມີຊີວິດທຸກປະເພດ. ດ້ວຍເຫດນີ້ ເມື່ອທຸກສິ່ງຖືກຕຽມການໄວ້ແລ້ວ, ພຣະເຈົ້າກໍປ່ອຍການທຳລາຍລ້າງຂອງພຣະອົງມາເທິງແຜ່ນດິນໂລກ. ມີພຽງແຕ່ໂນອາ ແລະ ສະມາຊິກຄົນອື່ນອີກເຈັດຄົນເທົ່ານັ້ນທີ່ລອດຈາກການທຳລາຍລ້າງນັ້ນ ຍ້ອນໂນອານະມັດສະການພຣະເຢໂຮວາ ແລະ ຫຼີກຫຼີກສິ່ງຊົ່ວຮ້າຍ.

ຕອນນີ້ໃຫ້ມາເບິ່ງໃນຍຸກປັດຈຸບັນ ນັ້ນກໍຄື: ມະນຸດທີ່ມີຄວາມຊອບທຳຄືກັນກັບໂນອາ ຜູ້ເຊິ່ງນະມັດສະການພຣະເຈົ້າ ແລະ ຫຼີກຫຼີກສິ່ງຊົ່ວຮ້າຍນັ້ນ ແມ່ນໄດ້ສູນຫາຍໄປໝົດແລ້ວ. ເຖິງຢ່າງໃດກໍຕາມ ພຣະເຈົ້າຍັງຄົງມີຄວາມເມດຕາຕໍ່ມະນຸດຊາດນີ້ ແລະ ຍັງຄົງໃຫ້ອະໄພແກ່ພວກເຂົາໃນລະຫວ່າງຍຸກສຸດທ້າຍນີ້ສະເໝີ. ພຣະເຈົ້າສະແຫວງຫາຄົນທີ່ປາຖະໜາຢາກໃຫ້ພຣະອົງປາກົດຕົວ. ພຣະອົງສະແຫວງຫາຄົນທີ່ສາມາດໄດ້ຍິນພຣະທຳຂອງພຣະອົງ, ຄົນທີ່ບໍ່ໄດ້ລືມການມອບໝາຍຂອງພຣະອົງ ແລະ ຖວາຍຫົວໃຈ ແລະ ຮ່າງກາຍຂອງພວກເຂົາໃຫ້ກັບພຣະອົງ. ພຣະອົງສະແຫວງຫາຄົນທີ່ເຊື່ອຟັງຄືກັນກັບເດັກນ້ອຍທີ່ຢູ່ຕໍ່ໜ້າພຣະອົງ ແລະ ຜູ້ຄົນທີ່ບໍ່ຕໍ່ຕ້ານພຣະອົງ. ຖ້າຫາກເຈົ້າອຸທິດຕົນໃຫ້ກັບພຣະເຈົ້າ, ບໍ່ໄດ້ຖືກຂັດຂວາງໂດຍອຳນາດ ຫຼື ກອງກຳລັງໃດໜຶ່ງ ແລ້ວພຣະເຈົ້າກໍຈະເບິ່ງເຈົ້າດ້ວຍຄວາມຊົມຊອບ ແລະ ຈະປະທານພອນຂອງພຣະອົງມາຍັງເຈົ້າ. ຖ້າເຈົ້າມີຖານະທີ່ສູງສົ່ງ, ມີຊື່ສຽງອັນຊົງກຽດ, ປະກອບດ້ວຍຄວາມຮູ້ທີ່ເຫຼືອລົ້ນ, ເປັນເຈົ້າຂອງຊັບສິນທີ່ອຸດົມສົມບູນ ແລະ ມີໜ້າມີຕາໃນສັງຄົມ, ແຕ່ສິ່ງເຫຼົ່ານີ້ບໍ່ໄດ້ຂັດຂວາງເຈົ້າຈາກການມາຢູ່ຕໍ່ໜ້າພຣະເຈົ້າເພື່ອຮັບເອົາການຮຽກເອີ້ນຂອງພຣະອົງ ແລະ ການມອບໝາຍຂອງພຣະອົງແລະ ເພື່ອເຮັດໃນສິ່ງທີ່ພຣະເຈົ້າຮຽກຮ້ອງຕ້ອງການຈາກເຈົ້າ, ແລ້ວທຸກສິ່ງທີ່ເຈົ້າເຮັດກໍຈະເປັນສິ່ງທີ່ມີຄວາມໝາຍທີ່ສຸດເທິງແຜ່ນດິນໂລກ ແລະ ເປັນກິດຈະການທີ່ຊອບທຳທີ່ສຸດຂອງມະນຸດຊາດ. ຖ້າເຈົ້າປະຕິເສດການເອີ້ນຂອງພຣະເຈົ້າ ຍ້ອນເຫັນແກ່ຖານະ ແລະ ເປົ້າໝາຍຂອງເຈົ້າເອງ, ທຸກສິ່ງທີ່ເຈົ້າເຮັດກໍຈະຖືກສາບແຊ່ງ ແລະ ຍິ່ງໄປກວ່ານັ້ນ ແມ່ນຈະຖືກພຣະເຈົ້າກຽດຊັງ. ບາງເທື່ອ ເຈົ້າເປັນປະທານປະເທດ, ນັກວິທະຍາສາດ, ສິດຍາພິບານ ຫຼື ເຖົ້າແກ່, ແຕ່ບໍ່ວ່າຕຳແໜ່ງຂອງເຈົ້າຈະສູງສົ່ງສໍ່າໃດກໍຕາມ, ຖ້າເຈົ້າເພິ່ງພາຄວາມຮູ້ ແລະ ຄວາມສາມາດຂອງເຈົ້າໃນພາລະໜ້າທີ່ຂອງເຈົ້າ, ແລ້ວເຈົ້າກໍຈະເປັນຄົນລົ້ມເຫຼວຢູ່ສະເໝີ ແລະ ຈະສູນເສຍການອວຍພອນຂອງພຣະເຈົ້າຕະຫຼອດເວລາ, ເພາະພຣະເຈົ້າບໍ່ຍອມຮັບຫຍັງເລີຍທີ່ເຈົ້າເຮັດ ແລະ ພຣະອົງຈະບໍ່ຍອມຮັບວ່າ ອາຊີບຂອງເຈົ້າເປັນອາຊີບທີ່ຊອບທຳ ຫຼື ຍອມຮັບວ່າ ເຈົ້າກຳລັງເຮັດວຽກເພື່ອຜົນປະໂຫຍດຂອງມະນຸດຊາດ. ພຣະອົງຈະເວົ້າວ່າ ທຸກສິ່ງທີ່ເຈົ້າເຮັດແມ່ນການນຳໃຊ້ຄວາມຮູ້

ແລະ ອຳນາດຂອງມະນຸດເພື່ອຜັກການປົກປ້ອງຂອງພຣະເຈົ້າອອກຫ່າງຈາກມະນຸດ ແລະ ກໍ່ເປັນເຊັ່ນນັ້ນເພື່ອປະຕິເສດການອວຍພອນຂອງພຣະເຈົ້າ. ພຣະອົງຈະກ່າວວ່າ ເຈົ້າກຳລັງນຳພາມະນຸດຊາດໄປສູ່ຄວາມມືດ, ສູ່ຄວາມຕາຍ ແລະ ສູ່ການເລີ່ມຕົ້ນຂອງການເປັນຢູ່ທີ່ປາສະຈາກຂໍ້ຈຳກັດ ເຊິ່ງມະນຸດໄດ້ສູນເສຍພຣະເຈົ້າ ແລະ ການອວຍພອນຂອງພຣະອົງ.

ນັບຕັ້ງແຕ່ການກຳເນີດວິທະຍາສາດສັງຄົມຂອງມວນມະນຸດ, ຄວາມຄິດຂອງມະນຸດກໍວຸ້ນຢູ່ນຳວິທະຍາສາດ ແລະ ຄວາມຮູ້. ແລ້ວວິທະຍາສາດ ແລະ ຄວາມຮູ້ກໍກາຍມາເປັນເຄື່ອງມືສຳລັບການປົກຄອງຂອງມະນຸດ ແລະ ບໍ່ມີພື້ນທີ່ພຽງພໍອີກຕໍ່ໄປສຳລັບໃຫ້ມະນຸດນະມັດສະການພຣະເຈົ້າ ແລະ ບໍ່ມີເງື່ອນໄຂທີ່ຈະນະມັດສະການພຣະເຈົ້າດ້ວຍຄວາມຊື່ນຊົມຍິນດີອີກຕໍ່ໄປ. ຕຳແໜ່ງຂອງພຣະເຈົ້າໄດ້ຫຼຸດຕໍ່າລົງຫຼາຍຍິ່ງຂຶ້ນໃນຫົວໃຈຂອງມະນຸດ. ຖ້າປາສະຈາກພຣະເຈົ້າໃນຫົວໃຈຂອງເຂົາ, ໂລກພາຍໃນໃນຂອງມະນຸດກໍ່ມືດມົນ, ສິ້ນຫວັງ ແລະ ວ່າງເປົ່າ. ຕໍ່ມາຈຶ່ງໄດ້ເກີດມີນັກວິທະຍາສາດສັງຄົມຫຼາຍຄົນ, ນັກປະຫວັດສາດ ແລະ ນັກການເມືອງເກີດຂຶ້ນເພື່ອອະທິບາຍທິດສະດີແຫ່ງວິທະຍາສາດສັງຄົມ, ທິດສະດີແຫ່ງການວິວັດທະນາການຂອງມະນຸດ ແລະ ທິດສະດີອື່ນໆທີ່ຂັດແຍ່ງກັບຄວາມຈິງທີ່ພຣະເຈົ້າໄດ້ສ້າງມະນຸດ, ເພື່ອເຕີມເຕັມຫົວໃຈ ແລະ ຄວາມຄິດຂອງມະນຸດ. ແລ້ວໃນລັກສະນະນີ້, ຄົນທີ່ເຊື່ອວ່າ ພຣະເຈົ້າໄດ້ສ້າງທຸກສິ່ງ ກໍຍິ່ງໜ້ອຍລົງ ແລະ ຄົນທີ່ເຊື່ອໃນທິດສະດີແຫ່ງວິວັດທະນາການກໍຍິ່ງມີຈຳນວນຫຼາຍຂຶ້ນ. ນອກຈາກນັ້ນ ກໍມີຄົນຈຳນວນຫຼາຍຄົນທີ່ເຫັນການບັນທຶກແຫ່ງພາລະກິດຂອງພຣະເຈົ້າ ແລະ ພຣະທຳຂອງພຣະອົງໃນລະຫວ່າງຍຸກແຫ່ງພຣະສັນຍາເດີມນັ້ນ ເປັນເໝືອນກັບເລື່ອງເລົ່າລື ແລະ ຕຳນານ. ໃນຫົວໃຈຂອງພວກເຂົາ, ຜູ້ຄົນເລີ່ມບໍ່ສົນໃຈຕໍ່ກຽດສັກສີ ແລະ ຄວາມຍິ່ງໃຫຍ່ຂອງພຣະເຈົ້າ, ບໍ່ສົນໃຈຕໍ່ຂໍ້ຄິດເຫັນທີ່ວ່າ ພຣະເຈົ້າມີຢູ່ ແລະ ມີອຳນາດເໜືອທຸກສິ່ງ. ຄວາມຢູ່ລອດຂອງມະນຸດຊາດ ແລະ ຊະຕາກຳຂອງປະເທດ ແລະ ຊົນຊາດບໍ່ສຳຄັນກັບພວກເຂົາອີກຕໍ່ໄປແລ້ວ ແລະ ມະນຸດດຳລົງຊີວິດຢູ່ໃນໂລກທີ່ວ່າງເປົ່າ ເຊິ່ງສົນໃຈແຕ່ການກິນ, ດື່ມ ແລະ ສະແຫວງຫາຄວາມພໍໃຈເທົ່ານັ້ນ... ມີຄົນສ່ວນໜ້ອຍທີ່ຈະສະແຫວງຫາດ້ວຍຕົນເອງວ່າ ພຣະເຈົ້າປະຕິບັດພາລະກິດຂອງພຣະອົງໃນປັດຈຸບັນຢູ່ບ່ອນໃດ ຫຼື ຄົ້ນຫາວິທີທີ່ພຣະອົງປົກຄອງ ແລະ ປັ້ນແຕ່ງຈຸດໝາຍປາຍທາງຂອງມະນຸດ. ດ້ວຍວິທີນີ້, ໂດຍມະນຸດບໍ່ຮູ້ຕົວ, ອາລິຍະທຳຂອງມະນຸດກໍຍິ່ງມີຄວາມສາມາດໜ້ອຍລົງທີ່ຈະຂັດກັບຄວາມປາຖະໜາຂອງມະນຸດ ແລະ ຍັງມີຄົນຢ່າງຫຼວງຫຼາຍທີ່ຮູ້ສຶກວ່າ ການດຳລົງຊີວິດແບບນີ້ໃນໂລກ ພວກເຂົາແມ່ນມີຄວາມສຸກໜ້ອຍກວ່າຄົນທີ່ໄດ້ຕາຍໄປແລ້ວ. ແມ່ນແຕ່ຄົນໃນປະເທດທີ່ເຄີຍມີຄວາມສີວິໄລສູງກໍຈົ່ມກັບຄວາມທຸກດັ່ງກ່າວ. ຍ້ອນວ່າຫາກປາສະຈາກການນຳພາຂອງພຣະເຈົ້າ, ບໍ່ວ່າຜູ້ປົກຄອງ ແລະ ນັກສັງຄົມສາດໃດໆ ຈະພະຍາຍາມຄົ້ນຄິດຢ່າງໜັກເພື່ອຮັກສາອາລິຍະທຳຂອງມະນຸດຫຼາຍສໍ່າໃດ, ມັນກໍບໍ່ມີປະໂຫຍດຫຍັງ. ບໍ່ມີໃຜສາມາດຕື່ມເຕັມຄວາມວ່າງເປົ່າໃນຫົວໃຈຂອງມະນຸດໄດ້, ຍ້ອນບໍ່ມີໃຜສາມາດເປັນຊີວິດຂອງມະນຸດໄດ້ ແລະ ບໍ່ມີທິດສະດີທາງສັງຄົມໃດທີ່ສາມາດປ່ອຍມະນຸດໃຫ້ເປັນອິດສະຫຼະຈາກຄວາມວ່າງເປົ່າທີ່ເຂົາທົນທຸກຢູ່. ວິທະຍາສາດ, ຄວາມຮູ້, ອິດສະຫຼະພາບ, ປະຊາທິປະໄຕ, ເວລາຫວ່າງ, ຄວາມສະດວກສະບາຍ,

ສິ່ງເຫຼົ່ານີ້ແມ່ນການປອບໃຈມະນຸດພຽງຊົ່ວຄາວເທົ່ານັ້ນ. ເຖິງວ່າຈະມີສິ່ງເຫຼົ່ານີ້, ມະນຸດກໍຍັງເຮັດບາບໂດຍຫຼີກເວັ້ນບໍ່ໄດ້ ແລະ ສະແດງຄວາມໂສກເສົ້າກັບຄວາມບໍ່ຍຸຕິທຳຂອງສັງຄົມ. ສິ່ງເຫຼົ່ານີ້ບໍ່ສາມາດຢັບຢັ້ງຄວາມຢາກໄດ້ ແລະ ຄວາມປາຖະໜາຂອງມະນຸດໃນການຄົ້ນຫາ. ນີ້ກໍ່ຍ້ອນວ່າ ມະນຸດຖືກສ້າງໂດຍພຣະເຈົ້າ ແລະ ການເສຍສະຫຼະ ແລະ ການຄົ້ນຫາທີ່ປາສະຈາກຄວາມຄິດຂອງມະນຸດຈຶ່ງພຽງແຕ່ສາມາດນຳພາໄປສູ່ຄວາມທຸກທໍລະມານຫຼາຍຂຶ້ນ ແລະ ພຽງແຕ່ເຮັດໃຫ້ມະນຸດດຳລົງຢູ່ໃນສະພາວະແຫ່ງຄວາມຢ້ານກົວຢູ່ຕະຫຼອດເວລາ, ບໍ່ຮູ້ຈັກວິທີຜະເຊີນກັບອະນາຄົດຂອງມະນຸດຊາດ ຫຼື ວິທີຜະເຊີນກັບເສັ້ນທາງທີ່ຢູ່ຂ້າງໜ້າ. ມະນຸດຍິ່ງຈະຢ້ານວິທະຍາສາດ ແລະ ຄວາມຮູ້ ແລະ ຍິ່ງໄປກວ່ານັ້ນກໍຢ້ານຄວາມຮູ້ສຶກວ່າງເປົ່າ. ໃນໂລກນີ້ ບໍ່ວ່າເຈົ້າຈະດຳລົງຊີວິດຢູ່ໃນປະເທດເສລີ ຫຼື ປະເທດທີ່ປາສະຈາກສິດທິມະນຸດ, ເຈົ້າກໍບໍ່ສາມາດຫຼົບໜີຈາກຊະຕາກຳຂອງມະນຸດໄດ້ຢ່າງແທ້ຈິງ. ບໍ່ວ່າເຈົ້າຈະເປັນຜູ້ປົກຄອງ ຫຼື ຄົນທີ່ຖືກປົກຄອງ, ເຈົ້າກໍບໍ່ສາມາດຫຼົບໜີຈາກຄວາມປາຖະໜາທີ່ຈະຄົ້ນຫາຊະຕາກຳ, ຄວາມລຶກລັບ ແລະ ຈຸດໝາຍປາຍທາງຂອງມະນຸດຊາດໄດ້ຢ່າງແທ້ຈິງ ແລ້ວແຮງໄກທີ່ເຈົ້າຈະສາມາດຫຼົບໜີຈາກຄວາມຮູ້ສຶກສັບສົນກັບຄວາມວ່າງເປົ່າ. ປະກົດການດັ່ງກ່າວ ເຊິ່ງເປັນປົກກະຕິກັບມະນຸດຊາດທັງໝົດ ແມ່ນຖືກເອີ້ນໂດຍນັກສັງຄົມສາດວ່າເປັນ ປະກົດການທາງສັງຄົມ, ແຕ່ບໍ່ມີບຸກຄົນຍິ່ງໃຫຍ່ຄົນໃດສາມາດອອກມາແກ້ໄຂບັນຫາດັ່ງກ່າວນີ້ໄດ້. ໃນທີ່ສຸດ ມະນຸດກໍຍັງເປັນມະນຸດ. ຕຳແໜ່ງ ແລະ ຊີວິດຂອງພຣະເຈົ້າບໍ່ສາມາດຖືກແທນທີ່ໂດຍມະນຸດຄົນໃດໄດ້. ມະນຸດຊາດບໍ່ພຽງແຕ່ຕ້ອງການສັງຄົມທີ່ຍຸຕິທຳ ເຊິ່ງທຸກຄົນໄດ້ຮັບການລ້ຽງດູເປັນຢ່າງດີ ແລະ ສະເໝີພາບກັນ ແລະ ເປັນອິດສະຫຼະ, ແຕ່ສິ່ງທີ່ມະນຸດຕ້ອງການແມ່ນຄວາມລອດພົ້ນຂອງພຣະເຈົ້າ ແລະ ການຈັດກຽມຊີວິດທີ່ພຣະອົງມີໃຫ້ກັບພວກເຂົາ. ມີພຽງແຕ່ເມື່ອມະນຸດໄດ້ຮັບການຈັດກຽມຊີວິດຂອງພຣະເຈົ້າ ແລະ ຄວາມລອດພົ້ນຂອງພຣະອົງເທົ່ານັ້ນ ຄວາມຕ້ອງການ, ຄວາມປາຖະໜາເພື່ອຄົ້ນຫາ ແລະ ຄວາມວ່າງເປົ່າຝ່າຍວິນຍານຂອງມະນຸດຈຶ່ງຈະໄດ້ຮັບການແກ້ໄຂ. ຖ້າປະຊາຊົນຂອງປະເທດ ຫຼື ຊົນຊາດໃດໜຶ່ງບໍ່ສາມາດຮັບເອົາຄວາມລອດພົ້ນ ແລະ ການເບິ່ງແຍງຈາກພຣະເຈົ້າ, ແລ້ວປະເທດ ຫຼື ຊົນຊາດດັ່ງກ່າວກໍຈະເດີນຢູ່ເທິງເສັ້ນທາງຄວາມຊຸດໂຊມ, ເສັ້ນທາງສູ່ຄວາມມືດ ແລະ ຈະຖືກທຳລາຍລ້າງໂດຍພຣະເຈົ້າ.

ບາງເທື່ອປະເທດຂອງເຈົ້າກຳລັງຈະເລີນຮຸ່ງເຮືອງໃນປັດຈຸບັນ ແຕ່ຖ້າເຈົ້າປ່ອຍໃຫ້ຄົນຂອງເຈົ້າຫັນໜີຈາກພຣະເຈົ້າ ແລ້ວປະເທດຂອງເຈົ້າກໍຈະພົບກັບການສູນເສຍການອວຍພອນຂອງພຣະເຈົ້າຫຼາຍຂຶ້ນເລື້ອຍໆ. ອາລິຍະທຳຂອງປະເທດຂອງເຈົ້າອາດຈະຖືກຢຽບຢ່ຳຢູ່ໃຕ້ຕີນເທື່ອລະໜ້ອຍ ແລະ ອີກບໍ່ດົນ ຜູ້ຄົນກໍຈະລຸກຮືຂຶ້ນຕໍ່ຕ້ານພຣະເຈົ້າ ແລະ ສາບແຊ່ງສະຫວັນ. ດ້ວຍເຫດນັ້ນ ຊະຕາກຳຂອງປະເທດໃດໜຶ່ງອາດຈະຖືກທຳລາຍໂດຍບໍ່ຮູ້ຕົວ. ພຣະເຈົ້າຈະສ້າງປະເທດມະຫາອຳນາດຂຶ້ນເພື່ອຈັດການກັບປະເທດເຫຼົ່ານັ້ນທີ່ຖືກພຣະເຈົ້າສາບແຊ່ງ ແລະ ອາດຈະກວດລ້າງພວກເຂົາອອກຈາກໜ້າແຜ່ນດິນໂລກ. ຄວາມຈະເລີນຮຸ່ງເຮືອງ ແລະ ຄວາມລົ້ມຈົມຂອງປະເທດ ຫຼື ຊົນຊາດໃດໜຶ່ງແມ່ນໄດ້ຖືກທຳນາຍໄວ້ແລ້ວ ແລະ ຂຶ້ນຢູ່ກັບວ່າ ຜູ້ປົກຄອງຂອງປະເທດ ຫຼື ຊົນຊາດນັ້ນຈະນະມັດສະການພຣະເຈົ້າຫຼື ບໍ ແລະ ພວກເຂົາຈະນຳພາປະຊາຊົນຂອງພວກເຂົາໃກ້ຊິດກັບພຣະອົງຫຼາຍຍິ່ງຂຶ້ນ ຫຼື ບໍ.

ເຖິງຢ່າງໃດກໍຕາມ ໃນຍຸກສຸດທ້າຍນີ້ ຍ້ອນຄົນທີ່ສະແຫວງຫາ ແລະ ນະມັດສະການພຣະເຈົ້າຢ່າງແທ້ຈິງມີໜ້ອຍ, ພຣະເຈົ້າຈຶ່ງປະທານຄວາມຊົມຊອບພິເສດກັບປະເທດທີ່ມີສາສະໜາຄຣິດເປັນສາສະໜາແຫ່ງຊາດ. ພຣະອົງຮວບຮວມປະເທດເຫຼົ່ານີ້ເຂົ້າກັນເພື່ອສ້າງຄ້າຍທີ່ຂ້ອນຂ້າງຊອບທຳຂອງໂລກ ໃນຂະນະທີ່ປະເທດເຊິ່ງບໍ່ມີພຣະເຈົ້າ ແລະ ປະເທດທີ່ບໍ່ນະມັດສະການພຣະເຈົ້າທີ່ແທ້ຈິງກໍກາຍມາເປັນປໍລະປັກຂອງຄ້າຍທີ່ຊອບທຳ. ໃນລັກສະນະນີ້, ພຣະເຈົ້າບໍ່ພຽງແຕ່ມີພື້ນທີ່ທ່າມກາງມະນຸດຊາດເພື່ອປະຕິບັດພາລະກິດຂອງພຣະອົງ ແຕ່ຍັງໄດ້ຮັບເອົາປະເທດທີ່ສາມາດປະຕິບັດສິດອຳນາດທີ່ຊອບທຳ ເພື່ອກຳນົດການລົງໂທດ ແລະ ຂໍ້ຈຳກັດໃນປະເທດເຫຼົ່ານັ້ນທີ່ຕໍ່ຕ້ານພຣະອົງ ແຕ່ເຖິງຢ່າງນັ້ນກໍຕາມ ຍັງມີໜ້ອຍຄົນທີ່ອອກມາເພື່ອນະມັດສະການພຣະເຈົ້າ ເພາະມະນຸດໄດ້ຫ່າງເຫີນຈາກພຣະອົງຫຼາຍແລ້ວ ແລະ ມະນຸດກໍ ລືມໄລພຣະເຈົ້າເປັນເວລາດົນນານມາແລ້ວ. ຍັງມີພຽງແຕ່ບາງປະເທດທີ່ປະຕິບັດຄວາມຊອບທຳ ແລະ ຕໍ່ຕ້ານຄວາມບໍ່ຊອບທຳເທິງແຜ່ນດິນໂລກ. ແຕ່ສິ່ງນີ້ແມ່ນໄກຈາກຄວາມປາຖະໜາຂອງພຣະເຈົ້າຫຼາຍ ຍ້ອນບໍ່ມີຜູ້ປົກຄອງຂອງປະເທດໃດທີ່ຈະອະນຸຍາດໃຫ້ພຣະເຈົ້າປົກຄອງຢູ່ເໜືອຜູ້ຄົນຂອງພວກເຂົາ ແລະ ບໍ່ມີພັກການເມືອງໃດທີ່ຈະເຕົ້າໂຮມປະຊາຊົນຂອງຕົນເອງເພື່ອນະມັດສະການພຣະເຈົ້າ; ພຣະເຈົ້າໄດ້ສູນເສຍພື້ນທີ່ເໝາະສົມຢູ່ໃນຫົວໃຈຂອງທຸກໆປະເທດ, ຊົນຊາດ, ພັກປົກຄອງ ແລະ ແມ່ນແຕ່ຢູ່ໃນຫົວໃຈຂອງແຕ່ລະຄົນ. ເຖິງແມ່ນວ່າ ກຳລັງທີ່ຊອບທຳມີຢູ່ໃນໂລກນີ້, ແຕ່ອຳນາດການປົກຄອງທີ່ພຣະເຈົ້າມີຢູ່ໃນຫົວໃຈຂອງມະນຸດນັ້ນແມ່ນອ່ອນແອຫຼາຍ. ຫາກປະສາຈາກການອວຍພອນຂອງພຣະເຈົ້າ, ເວທີທາງການເມືອງກໍຈະຕົກຢູ່ໃນຄວາມສັບສົນບໍ່ເປັນລະບຽບ ແລະ ບໍ່ສາມາດຕ້ານທານການໂຈມຕີພຽງຄັ້ງດຽວໄດ້. ສຳລັບມະນຸດຊາດ, ການປາສະຈາກການອວຍພອນຂອງພຣະເຈົ້າກໍເປັນເໝືອນກັບການບໍ່ມີດວງຕາເວັນ. ບໍ່ວ່າຜູ້ປົກຄອງຈະປະກອບສ່ວນຢ່າງພາກພຽນໃຫ້ກັບປະຊາຊົນຂອງພວກເຂົາສ່ຳໃດ, ບໍ່ວ່າ ມະນຸດຊາດຈະຮ່ວມກັນຈັດກອງປະຊຸມອັນຊອບທຳຫຼາຍສ່ຳໃດກໍຕາມ, ບໍ່ມີສິ່ງໃດເລີຍຈະປ່ຽນແປງ ຫຼື ເຮັດໃຫ້ຊະຕາກຳຂອງມະນຸດຊາດດີຂຶ້ນ. ມະນຸດເຊື່ອວ່າ ປະເທດທີ່ຜູ້ຄົນໄດ້ຮັບການລ້ຽງດູ, ມັ່ງຄັ່ງກິນດີ ແລະ ດຳລົງຊີວິດຢູ່ຮ່ວມກັນຢ່າງສັນຕິສຸກ ແມ່ນປະເທດທີ່ດີ ແລະ ເປັນປະເທດທີ່ມີການນຳພາທີ່ດີ. ແຕ່ພຣະເຈົ້າບໍ່ໄດ້ຄິດແບບນັ້ນ. ພຣະອົງເຊື່ອວ່າ ປະເທດໃດໜຶ່ງທີ່ບໍ່ມີໃຜນະມັດສະການພຣະເຈົ້າແມ່ນປະເທດທີ່ພຣະອົງຈະທຳລາຍລ້າງ. ວິທີການຄິດຂອງມະນຸດບໍ່ຖືກກັບວິທີການຄິດຂອງພຣະເຈົ້າຫຼາຍ. ດ້ວຍເຫດນັ້ນຖ້າຫົວໜ້າປະເທດໃດໜຶ່ງບໍ່ນະມັດສະການພຣະເຈົ້າ ແລ້ວຊະຕາກຳຂອງປະເທດນີ້ກໍຈະເປັນປະເທດທີ່ໜ້າເສົ້າ ແລະ ປະເທດນັ້ນຈະບໍ່ມີຈຸດໝາຍປາຍທາງຫຍັງເລີຍ.

ພຣະເຈົ້າບໍ່ມີສ່ວນຮ່ວມໃນການເມືອງຂອງມະນຸດ ແຕ່ຊະຕາກຳຂອງປະເທດ ຫຼື ຊົນຊາດໃດໜຶ່ງແມ່ນຖືກຄວບຄຸມໂດຍພຣະເຈົ້າ. ພຣະເຈົ້າຄວບຄຸມໂລກນີ້ ແລະ ຈັກກະວານນີ້ທັງປວງ. ຊະຕາກຳຂອງມະນຸດ ແລະ ແຜນການຂອງພຣະເຈົ້າແມ່ນກ່ຽວພັນກັນຢ່າງໃກ້ຊິດ ແລະ ບໍ່ມີມະນຸດ, ປະເທດ ຫຼື ຊົນຊາດໃດທີ່ຖືກລະເວັ້ນຈາກອຳນາດອະທິປະໄຕຂອງພຣະເຈົ້າ. ຖ້າມະນຸດປາຖະໜາທີ່ຈະຮູ້ຈັກຊະຕາກຳຂອງເຂົາ, ເຂົາກໍຕ້ອງມາຢູ່ຕໍ່ໜ້າພຣະເຈົ້າ. ພຣະເຈົ້າຈະເຮັດໃຫ້ຄົນທີ່ຕິດຕາມ ແລະ ນະມັດສະການ

ພຣະອົງນັ້ນຈະເລີນຮຸ່ງເຮືອງ ແລະ ຈະນຳຄວາມເສື່ອມເສຍ ແລະ ການດັບສູນມາຍັງຄົນທີ່ຕໍ່ຕ້ານ ແລະ ປະຕິເສດພຣະອົງ.

ໃຫ້ທົບທວນເຫດການໃນພຣະຄຳພີໃນຫົວຂໍ້ທີ່ວ່າ ພຣະເຈົ້າທຳລາຍເມືອງໂຊໂດມ ແລະ ພ້ອມນີ້ກໍຂໍໃຫ້ຄິດເບິ່ງວ່າ ເມຍຂອງໂລດກາຍມາເປັນເສົາເກືອໄດ້ແນວໃດ. ໃຫ້ຫວນກັບໄປແລ້ວຄິດເບິ່ງວ່າ ປະຊາຊົນເມືອງນີເນເວສຳນຶກຄວາມຜິດບາບຂອງພວກເຂົາໂດຍປົກຄຸມດ້ວຍຜ້າກະສອບ ແລະ ຂີ້ເຖົ່າແນວໃດ; ໃຫ້ທົບທວນເບິ່ງວ່າ ແມ່ນຫຍັງເກີດຂຶ້ນຫຼັງຈາກທີ່ຊາວຢິວໄດ້ຄຶງພຣະເຢຊູໃສ່ໄມ້ກາງແຂນ 2.000 ປີກ່ອນ. ຊາວຢິວຖືກໄລ່ອອກຈາກອິດສະຣາເອນ ແລະ ໜີໄປຢູ່ປະເທດອື່ນໆທົ່ວແຜ່ນດິນໂລກ. ຫຼາຍຄົນຖືກຂ້າ ແລະ ຊົນຊາດຢິວທັງໝົດກໍປະສົບກັບຄວາມເຈັບປວດທີ່ບໍ່ເຄີຍມີມາກ່ອນຈາກການທີ່ປະເທດຂອງຕົນຖືກທຳລາຍ. ພວກເຂົາໄດ້ຄຶງພຣະເຈົ້າໃສ່ໄມ້ກາງແຂນ ນັ້ນກໍຄືການສ້າງບາບກຳທີ່ຊົ່ວຮ້າຍ ແລະ ທ້າທາຍອຸປະນິໄສຂອງພຣະເຈົ້າ. ພວກເຂົາຖືກບັງຄັບໃຫ້ຊົດໃຊ້ໃນສິ່ງທີ່ພວກເຂົາໄດ້ກະທຳ ແລະ ຖືກບັງຄັບໃຫ້ແບກຮັບເອົາຜົນຂອງການກະທຳຂອງພວກເຂົາທັງໝົດ. ພວກເຂົາກ່າວໂທດພຣະເຈົ້າ, ປະຕິເສດພຣະເຈົ້າ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງໄດ້ຮັບຊະຕາກຳ ນັ້ນກໍຄື: ການຖືກພຣະເຈົ້າລົງໂທດ. ນີ້ແມ່ນຜົນຕາມມາ ແລະ ໄພພິບັດອັນຂົມຂື່ນ ທີ່ຜູ້ປົກຄອງຂອງພວກເຂົາໄດ້ນຳມາສູ່ປະເທດ ແລະ ຊົນຊາດຂອງພວກເຂົາເອງ.

ໃນປັດຈຸບັນນີ້ ພຣະເຈົ້າໄດ້ກັບຄືນມາສູ່ແຜ່ນດິນໂລກເພື່ອປະຕິບັດພາລະກິດຂອງພຣະອົງ. ຈຸດໝາຍທຳອິດຂອງພຣະອົງກໍຄືຮູບແບບການປົກຄອງພະເດັດການ ນັ້ນກໍຄື: ປະເທດຈີນ ເຊິ່ງເປັນປ້ອມປາການທີ່ເດັດດ່ຽວຂອງລັດທິບໍ່ເຊື່ອພຣະເຈົ້າ. ພຣະເຈົ້າໄດ້ຮັບກຸ່ມຄົນໂດຍສະຕິປັນຍາ ແລະ ລິດອຳນາດຂອງພຣະອົງ. ໃນຊ່ວງເວລານີ້, ພຣະອົງຖືກຕາມລ່າໂດຍພັກປົກຄອງຂອງຈີນໃນທຸກວິທີທາງ ແລະ ປະສົບກັບການທົນທຸກທໍລະມານທີ່ຍິ່ງໃຫຍ່ ໂດຍບໍ່ມີບ່ອນວາງສີສະຂອງພຣະອົງ, ບໍ່ສາມາດຊອກຫາບ່ອນທີ່ຈະຫຼົບຊ້ອນໄດ້. ເຖິງຢ່າງນັ້ນກໍຕາມ ພຣະເຈົ້າກໍຍັງຄົງສືບຕໍ່ພາລະກິດທີ່ພຣະອົງຕັ້ງໃຈທີ່ຈະປະຕິບັດ ນັ້ນກໍຄື: ພຣະອົງກ່າວຖ້ອຍຄຳຂອງພຣະອົງ ແລະ ເຜີຍແຜ່ຂ່າວປະເສີດ. ບໍ່ມີໃຜສາມາດຢັ່ງເຖິງຄວາມລິດທານຸພາບສູງສຸດຂອງພຣະເຈົ້າໄດ້. ໃນປະເທດຈີນ ເຊິ່ງເປັນປະເທດທີ່ນັບພຣະເຈົ້າເປັນສັດຕູ, ພຣະເຈົ້າກໍບໍ່ເຄີຍຢຸດເຊົາພາລະກິດຂອງພຣະອົງ. ກົງກັນຂ້າມ, ຫຼາຍຄົນໄດ້ຍອມຮັບເອົາພາລະກິດ ແລະ ພຣະທຳຂອງພຣະອົງ, ຍ້ອນພຣະເຈົ້າຊ່ວຍໃຫ້ມະນຸດຊາດແຕ່ລະຄົນລອດພົ້ນໃຫ້ຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້. ພວກເຮົາເຊື່ອວ່າ ບໍ່ມີປະເທດ ຫຼື ລິດອຳນາດໃດທີ່ສາມາດຢືນຂວາງສິ່ງທີ່ພຣະເຈົ້າປາຖະໜາທີ່ຈະບັນລຸໄດ້. ຄົນທີ່ຂັດຂວາງພາລະກິດຂອງພຣະເຈົ້າ, ຕໍ່ຕ້ານພຣະທຳຂອງພຣະເຈົ້າ ແລະ ລົບກວນ ແລະ ທຳລາຍແຜນການຂອງພຣະເຈົ້າຈະຖືກລົງໂທດໂດຍພຣະເຈົ້າໃນທີ່ສຸດ. ຄົນທີ່ທ້າທາຍພາລະກິດຂອງພຣະເຈົ້າກໍຈະຖືກສົ່ງລົງນະຮົກ; ປະເທດໃດກໍຕາມທີ່ທ້າທາຍພາລະກິດຂອງພຣະເຈົ້າຈະຖືກທຳລາຍ; ຊົນຊາດໃດກໍຕາມທີ່ລຸກຮື້ຂຶ້ນເພື່ອຕໍ່ຕ້ານພາລະກິດຂອງພຣະເຈົ້າຈະຖືກກວາດລ້າງອອກຈາກແຜ່ນດິນໂລກນີ້ ແລະ ຈະບໍ່ມີຜູ້ຄົນແບບນັ້ນໃນໂລກນີ້ອີກຕໍ່ໄປ. ເຮົາແນະນຳໃຫ້ປະຊາຊົນຂອງທຸກຊົນຊາດ, ປະເທດ ແລະ ແມ່ນແຕ່ອຸດສາຫະກຳທັງໝົດໃຫ້ຟັງສຽງຂອງພຣະເຈົ້າ,

ເພື່ອເບິ່ງພາລະກິດຂອງພຣະເຈົ້າ ແລະ ເພື່ອສົນໃຈກັບຊະຕາກຳຂອງມະນຸດຊາດເພື່ອເຮັດໃຫ້ພຣະເຈົ້າເປັນຜູ້ບໍລິສຸດທີ່ສຸດ, ເປັນຕານັບຖືທີ່ສຸດ, ສູງສົ່ງທີ່ສຸດ ແລະ ເປັນພຽງຈຸດມຸ່ງໝາຍດຽວຂອງການນະມັດສະການທ່າມກາງມະນຸດ ແລະ ເພື່ອເຮັດໃຫ້ມະນຸດຊາດທັງໝົດດຳລົງຊີວິດຢູ່ພາຍໃຕ້ການອວຍພອນຂອງພຣະເຈົ້າ ເໝືອນກັບທີ່ເຊື້ອສາຍຂອງອັບຣາຮາມ ຜູ້ເຊິ່ງດຳລົງຊີວິດຢູ່ໃນພຣະສັນຍາຂອງພຣະເຢໂຮວາ ແລະ ເໝືອນກັບອາດາມ ແລະ ເອວາ ຜູ້ເຊິ່ງ ພຣະເຈົ້າໄດ້ສ້າງກ່ອນ ຜູ້ເຊິ່ງດຳລົງຊີວິດຢູ່ໃນສວນເອເດນ.

ພາລະກິດຂອງພຣະເຈົ້າຊັດສາດໄປຂ້າງໜ້າເໝືອນກັບຄື້ນທະເລກ້ອນໃຫຍ່. ບໍ່ມີໃຜສາມາດກັກຂັງພຣະອົງໄດ້ ແລະ ບໍ່ມີໃຜສາມາດຢັບຢັ້ງບາດຍ່າງຂອງພຣະອົງໄດ້. ມີພຽງແຕ່ຄົນທີ່ຟັງພຣະທຳຂອງພຣະອົງຢ່າງໃກ້ຊິດ ແລະ ຜູ້ທີ່ສະແຫວງຫາ ແລະ ກະຫາຍຫາພຣະອົງເທົ່ານັ້ນ ທີ່ສາມາດຕິດຕາມບາດກ້າວຂອງພຣະອົງ ແລະ ຮັບເອົາພຣະສັນຍາຂອງພຣະອົງ. ຄົນທີ່ບໍ່ຍອມປະຕິບັດຕາມພຣະອົງກໍຈະປະສົບກັບໄພພິບັດທີ່ບໍ່ອາດຕ້ານທານໄດ້ ແລະ ຈະໄດ້ຮັບການລົງໂທດທີ່ເໝາະສົມທີ່ສຸດ.

# ພາກພະໜວກ 3
# ມະນຸດພຽງແຕ່ສາມາດໄດ້ຮັບຄວາມລອດພົ້ນທ່າມກາງການຄຸ້ມຄອງຂອງພຣະເຈົ້າເທົ່ານັ້ນ

ໃນສາຍຕາຂອງທຸກຄົນ, ການຄຸ້ມຄອງຂອງພຣະເຈົ້າເປັນສິ່ງທີ່ບໍ່ຄຸ້ນເຄີຍຫຼາຍ ຍ້ອນຜູ້ຄົນຄິດວ່າການຄຸ້ມຄອງຂອງພຣະເຈົ້າຖືກກຳຈັດອອກຈາກພວກເຂົາຢ່າງສິ້ນເຊີງ. ຜູ້ຄົນຄິດວ່າການຄຸ້ມຄອງຂອງພຣະເຈົ້າເປັນພາລະກິດຂອງພຣະອົງເທົ່ານັ້ນ ແລະ ເປັນທຸລະຂອງພຣະເຈົ້າເທົ່ານັ້ນ ແລະ ດ້ວຍເຫດນັ້ນມະນຸດຈຶ່ງບໍ່ສົນໃຈຕໍ່ການຄຸ້ມຄອງຂອງພຣະອົງ. ດ້ວຍເຫດນີ້, ຄວາມລອດພົ້ນຂອງມະນຸດຈຶ່ງກາຍເປັນຄວາມບໍ່ແຈ່ມແຈ້ງ ແລະ ຄວາມບໍ່ຊັດເຈນ ແລະ ຕອນນີ້ບໍ່ມີຫຍັງນອກຈາກວາທະສາດທີ່ວ່າງເປົ່າ. ເຖິງແມ່ນວ່າມະນຸດຕິດຕາມພຣະເຈົ້າເພື່ອຮັບເອົາຄວາມລອດພົ້ນ ແລະ ເຂົ້າສູ່ຈຸດໝາຍປາຍທາງທີ່ອັດສະຈັນ, ເຂົາບໍ່ໄດ້ກັງວົນກ່ຽວກັບວິທີທີ່ພຣະເຈົ້າປະຕິບັດພາລະກິດຂອງພຣະອົງ. ມະນຸດບໍ່ສົນໃຈໃນສິ່ງທີ່ພຣະເຈົ້າໄດ້ວາງແຜນ ຫຼື ໃນພາກສ່ວນທີ່ເຂົາຕ້ອງປະຕິບັດເພື່ອຈະໄດ້ລອດພົ້ນ. ສິ່ງນີ້ຈັ່ງແມ່ນໜ້າເສົ້າໃຈແທ້ເດ! ຄວາມລອດພົ້ນຂອງມະນຸດບໍ່ສາມາດຖືກແຍກອອກຈາກການຄຸ້ມຄອງຂອງພຣະເຈົ້າ ຫຼື ບໍ່ສາມາກຖືກແຍກອອກຈາກແຜນການຂອງພຣະອົງ. ແຕ່ເຖິງຢ່າງນັ້ນກໍຕາມ, ມະນຸດບໍ່ຄິດຫຍັງກ່ຽວກັບການຄຸ້ມຄອງຂອງພຣະເຈົ້າ ແລະ ດ້ວຍເຫດນັ້ນ ພວກເຂົາຈຶ່ງໄດ້ຫ່າງເຫີນຈາກພຣະອົງຫຼາຍຂຶ້ນ. ສິ່ງນີ້ເຮັດໃຫ້ຜູ້ຄົນຈຳນວນເພີ່ມຂຶ້ນ ທີ່ບໍ່ຮູ້ຫຍັງຈັກຢ່າງກ່ຽວກັບບັນຫານີ້ ເຊິ່ງເຊື່ອມໂຍງຢ່າງໃກ້ຊິດກັບຄຳຖາມແຫ່ງຄວາມລອດພົ້ນ ເຊັ່ນ: ການສ້າງແມ່ນຫຍັງ, ການເຊື່ອໃນພຣະເຈົ້າແມ່ນຫຍັງ, ວິທີນະມັດສະການພຣະເຈົ້າ ແລະ ອື່ນໆອີກ, ເພື່ອກາຍເປັນສ່ວນໜຶ່ງຂອງຜູ້ຕິດຕາມຂອງພຣະອົງ. ແຕ່ນີ້ຕໍ່ໄປ, ໃນຕອນນີ້ ພວກເຮົາຕ້ອງໄດ້ສົນທະນາກັນກ່ຽວກັບການຄຸ້ມຄອງຂອງພຣະເຈົ້າ ເພື່ອວ່າຜູ້ຕິດຕາມພຣະອົງແຕ່ລະຄົນຈະເຂົ້າໃຈຢ່າງຊັດເຈນເຖິງຄວາມໝາຍອັນສຳຄັນຂອງການຕິດຕາມ ແລະ ການເຊື່ອໃນພຣະອົງ. ການເຮັດແບບນີ້ຈະຊ່ວຍໃຫ້ແຕ່ລະຄົນເລືອກເສັ້ນທາງທີ່ພວກເຂົາຄວນເດີນຢ່າງຖືກຕ້ອງຫຼາຍຂຶ້ນ, ແທນທີ່ຈະຕິດຕາມພຣະເຈົ້າເພື່ອຮັບພອນເທົ່ານັ້ນ ຫຼື ຫຼີກລ່ຽງໄພພິບັດ ຫຼື ຢູ່ຢືນຢ່າງໂດດເດັ່ນທ່າມກາງຄົນອື່ນໆ.

ເຖິງແມ່ນວ່າ ການຄຸ້ມຄອງຂອງພຣະເຈົ້າເລິກເຊິ່ງ, ມັນກໍບໍ່ໄດ້ເກີນຄວາມເຂົ້າໃຈຂອງມະນຸດ. ນີ້ກໍຍ້ອນວ່າພາລະກິດທັງໝົດຂອງພຣະເຈົ້າເຊື່ອມໂຍງກັບການຄຸ້ມຄອງຂອງພຣະອົງ ແລະ ພາລະກິດຂອງພຣະອົງເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ ແລະ ກ່ຽວຂ້ອງກັບຊີວິດ, ການດຳລົງຊີວິດ ແລະ ຈຸດໝາຍປາຍທາງຂອງມະນຸດຊາດ. ພາລະກິດທີ່ພຣະເຈົ້າກະທຳໃນທ່າມກາງມະນຸດ ແລະ ຕໍ່ມະນຸດແມ່ນສາມາດເວົ້າໄດ້ວ່າ ມີຄວາມເປັນຈິງ ແລະ ມີຄວາມໝາຍຫຼາຍ. ມະນຸດສາມາດເບິ່ງເຫັນ ແລະ ຜະເຊີນກັບພາລະກິດນັ້ນໄດ້ ແລະ ມັນຢູ່ຫ່າງໄກຈາກສິ່ງທີ່ເປັນທິດສະດີ. ຖ້າມະນຸດບໍ່ສາມາດຮັບເອົາທຸກພາລະກິດທີ່ພຣະເຈົ້າກະທຳ ແລ້ວແມ່ນຫຍັງຄືຄວາມໝາຍຂອງພາລະກິດຂອງພຣະອົງ? ແລ້ວການຄຸ້ມຄອງດັ່ງກ່າວຈະສາມາດນຳພາໄປສູ່ຄວາມລອດພົ້ນຂອງມະນຸດໄດ້ແນວໃດ? ຫຼາຍຄົນທີ່

ຕິດຕາມພຣະເຈົ້າພຽງສົນໃຈໃນວິທີການຮັບພອນ ຫຼື ກຳຈັດໄພພິບັດ. ທັນທີທີ່ກ່າວເຖິງພາລະກິດ ແລະ ການຄຸ້ມຄອງຂອງພຣະເຈົ້າ, ພວກເຂົາພາກັນມິດງຽບ ແລະ ບໍ່ສົນໃຈຫຍັງທັງໝົດ. ພວກເຂົາຄິດວ່າ ການເຂົ້າໃຈບັນຫາທີ່ໜ້າເບື່ອດັ່ງກ່າວຈະບໍ່ຊ່ວຍໃຫ້ຊີວິດຂອງພວກເຂົາຈະເລີນເຕີບໂຕຂຶ້ນ ຫຼື ມີຜົນປະໂຫຍດຫຍັງ. ດ້ວຍເຫດນັ້ນ ເຖິງແມ່ນວ່າ ພວກເຂົາໄດ້ຍິນກ່ຽວກັບການຄຸ້ມຄອງຂອງພຣະເຈົ້າ, ພວກເຂົາກໍສົນໃຈມັນພຽງໜ້ອຍດຽວ. ພວກເຂົາບໍ່ເຫັນວ່າມັນເປັນສິ່ງທີ່ມີຄຸນຄ່າທີ່ຈະຮັບເອົາແຮງໄກທີ່ພວກເຂົາຈະຮັບເອົາມັນໃຫ້ກາຍເປັນສ່ວນໜຶ່ງໃນຊີວິດຂອງພວກເຂົາ. ຜູ້ຄົນດັ່ງກ່າວມີພຽງຈຸດປະສົງໜຶ່ງດຽວໃນການຕິດຕາມພຣະເຈົ້າ ແລະ ຈຸດປະສົງນັ້ນກໍຄືການຮັບພອນ. ຜູ້ຄົນດັ່ງກ່າວບໍ່ສາມາດໃສ່ໃຈກັບສິ່ງອື່ນໃດທີ່ບໍ່ພົວພັນກັບຈຸດປະສົງນີ້ໂດຍກົງ. ສຳລັບພວກເຂົາແລ້ວ, ບໍ່ມີເປົ້າໝາຍໃດທີ່ຖືກຕ້ອງເກີນກວ່າການເຊື່ອໃນພຣະເຈົ້າເພື່ອການຮັບພອນ, ມັນເປັນຄຸນຄ່າທີ່ແທ້ຈິງແຫ່ງຄວາມເຊື່ອຂອງພວກເຂົາ. ຖ້າມີສິ່ງໃດໜຶ່ງບໍ່ໄດ້ປະກອບສ່ວນໃນເປົ້າໝາຍນີ້, ພວກເຂົາກໍຈະບໍ່ໄດ້ຮັບການດົນບັນດານຈາກມັນທັງສິ້ນ. ນີ້ຄືກໍລະນີຂອງຄົນສ່ວນໃຫຍ່ທີ່ເຊື່ອໃນພຣະເຈົ້າໃນປັດຈຸບັນ. ເປົ້າໝາຍ ແລະ ເຈດຕະນາຂອງພວກເຂົາເບິ່ງຄືວ່າຖືກຕ້ອງ ຍ້ອນວ່າໃນຂະນະທີ່ພວກເຂົາເຊື່ອໃນພຣະເຈົ້າ ພວກເຂົາຍັງເສຍສະຫຼະເພື່ອພຣະເຈົ້າ, ອຸທິດຕົນຕໍ່ພຣະເຈົ້າ ແລະ ປະຕິບັດໜ້າທີ່ຂອງພວກເຂົາ. ພວກເຂົາຍອມສະລະຄວາມໜຸ່ມຂອງພວກເຂົາ, ປະຖິ້ມຄອບຄົວ ແລະ ອາຊີບ ແລະ ເຖິງກັບໃຊ້ເວລາຫຼາຍປີອອກຈາກເຮືອນເພື່ອເຮັດໃຫ້ຕົນເອງຫຍຸ້ງ. ເພື່ອເຫັນແກ່ເປົ້າໝາຍອັນສູງສຸດຂອງພວກເຂົາ, ພວກເຂົາປ່ຽນຄວາມສົນໃຈຂອງພວກເຂົາເອງ, ມຸມມອງກ່ຽວກັບຊີວິດຂອງພວກເຂົາ ແລະ ເຖິງກັບປ່ຽນທິດທາງທີ່ພວກເຂົາສະແຫວງຫາ; ແຕ່ເຖິງຢ່າງໃດກໍຕາມ ພວກເຂົາກໍບໍ່ສາມາດປ່ຽນແປງຈຸດປະສົງແຫ່ງຄວາມເຊື່ອຂອງພວກເຂົາໃນພຣະເຈົ້າໄດ້. ພວກເຂົາວຸ້ນວາຍຫາການຄຸ້ມຄອງອຸດົມຄະຕິຂອງພວກເຂົາເອງ; ບໍ່ວ່າຫົນທາງຈະຍາວໄກພຽງໃດ ແລະ ບໍ່ວ່າລະຫວ່າງທາງຈະມີຄວາມລຳບາກ ແລະ ອຸປະສັກຫຼາຍພຽງໃດກໍຕາມ ພວກເຂົາກໍບໍ່ຍອມຖອຍ ແລະ ບໍ່ຢ້ານຄວາມຕາຍ. ອຳນາດຫຍັງທີ່ເຮັດໃຫ້ພວກເຂົາສືບຕໍ່ອຸທິດຕົນໃນລັກສະນະນີ້? ມັນແມ່ນຄວາມສຳນຶກຂອງພວກເຂົາບໍ? ມັນແມ່ນລັກສະນະທີ່ຍິ່ງໃຫຍ່ ແລະ ສູງສົ່ງຂອງພວກເຂົາບໍ? ມັນແມ່ນຄວາມຕັ້ງໃຈເພື່ອຕໍ່ສູ້ກັບກອງກຳລັງຊົ່ວຮ້າຍຈົນເຖິງທີ່ສຸດບໍ? ມັນແມ່ນຄວາມສັດທາຂອງພວກເຂົາທີ່ຈະເປັນພະຍານໃຫ້ກັບພຣະເຈົ້າໂດຍບໍ່ຫວັງຜົນຕອບແທນບໍ? ມັນແມ່ນຄວາມຊື່ສັດຂອງພວກເຂົາທີ່ຈະເຕັມໃຈສະຫຼະທຸກສິ່ງເພື່ອບັນລຸຄວາມປະສົງຂອງພຣະເຈົ້າບໍ? ຫຼື ມັນແມ່ນຈິດວິນຍານແຫ່ງການອຸທິດຕົນ ທີ່ຍອມປະຖິ້ມຄວາມຕ້ອງການສ່ວນຕົວທີ່ເກີນຂອບເຂດບໍ? ສຳລັບຜູ້ຄົນທີ່ບໍ່ເຄີຍເຂົ້າໃຈພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າທີ່ມອບຢ່າງຫຼວງຫຼາຍຂະໜາດນັ້ນ ກໍຖືວ່າເປັນສິ່ງມະຫັດສະຈັນ ໄດ້ຂ້ອນຂ້າງງ່າຍ! ສຳລັບຊ່ວງເວລານີ້, ໃຫ້ພວກເຮົາບໍ່ສົນທະນາກັນກ່ຽວກັບວິທີທີ່ຜູ້ຄົນເຫຼົ່ານີ້ໄດ້ມອບ. ເຖິງຢ່າງໃດກໍຕາມ, ພຶດຕິກຳຂອງພວກເຂົາແມ່ນສົມຄວນເປັນຢ່າງສູງແກ່ການວິເຄາະຂອງພວກເຮົາ. ນອກຈາກຜົນປະໂຫຍດທີ່ກ່ຽວພັນກັບພວກເຂົາຢ່າງໃກ້ຊິດແລ້ວ, ຍັງຈະມີເຫດຜົນໃດອີກທີ່ຜູ້ຄົນທີ່ບໍ່ເຄີຍເຂົ້າໃຈພຣະເຈົ້າ ຈະມອບໃຫ້ແກ່ພຣະອົງຫຼາຍຂະໜາດນັ້ນ? ໃນນີ້ ພວກເຮົາກໍຄົ້ນພົບບັນຫາທີ່ບໍ່ໄດ້ລະບຸ

ມາກ່ອນ: ຄວາມສຳພັນຂອງມະນຸດກັບພຣະເຈົ້າເປັນພຽງຜົນປະໂຫຍດສ່ວນຕົວທີ່ວໆໄປເທົ່ານັ້ນ. ມັນເປັນຄວາມສຳພັນລະຫວ່າງຜູ້ຮັບ ແລະ ຜູ້ໃຫ້ພອນ. ເວົ້າງ່າຍໆກໍຄື ມັນຄ້າຍຄືຄວາມສຳພັນລະຫວ່າງພະນັກງານ ແລະ ນາຍຈ້າງ. ພະນັກງານເຮັດວຽກເພື່ອໄດ້ຮັບລາງວັນທີ່ນາຍຈ້າງປະທານໃຫ້. ບໍ່ມີຄວາມຮັກໄຄ່ໃນຄວາມສຳພັນດັ່ງກ່າວ, ມີພຽງແຕ່ການຕິດຕໍ່ທາງທຸລະກິດ. ບໍ່ມີການຮັກ ຫຼື ການບໍ່ຖືກຮັກ, ມີພຽງການກຸສົນ ແລະ ຄວາມເມດຕາ. ບໍ່ມີຄວາມເຂົ້າໃຈ, ມີແຕ່ຄວາມໂກດແຄ້ນທີ່ຖືກປາບປາມ ແລະ ການຫຼອກລວງເທົ່ານັ້ນ. ບໍ່ມີຄວາມສະໜິດສະໜົມ, ມີແຕ່ອ່າວທະເລທີ່ບໍ່ສາມາດຂ້າມຜ່ານໄດ້. ບັດນີ້ເມື່ອສິ່ງຕ່າງໆໄດ້ມາເຖິງຈຸດນີ້ແລ້ວ, ຜູ້ໃດຈະສາມາດປີ້ນກັບເສັ້ນທາງດັ່ງກ່າວໄດ້? ແລ້ວມີຈັກຄົນທີ່ສາມາດເຂົ້າໃຈວ່າ ຄວາມສຳພັນແບບນີ້ໄດ້ຊົ່ວຮ້າຍຫຼາຍສໍ່າໃດ? ເຮົາເຊື່ອວ່າເມື່ອຜູ້ຄົນເຮັດໃຫ້ຕົນເອງຈົມປັກຢູ່ກັບຄວາມສຸກໃນການຮັບພອນ, ບໍ່ມີໃຜສາມາດຈິນຕະນາການໄດ້ວ່າ ຄວາມສຳພັນດັ່ງກ່າວກັບພຣະເຈົ້າເປັນຕາອັບອາຍ ແລະ ເປັນຕາລັງກຽດພຽງໃດ.

ສິ່ງທີ່ໜ້າເສົ້າໃຈທີ່ສຸດກ່ຽວກັບຄວາມເຊື່ອໃນພຣະເຈົ້າກໍຄື ມະນຸດດຳເນີນການຄຸ້ມຄອງຂອງເຂົາເອງໃນທ່າມກາງພາລະກິດຂອງພຣະເຈົ້າ ແລະ ບໍ່ສົນໃຈກັບການຄຸ້ມຄອງຂອງພຣະເຈົ້າ. ຄວາມລົ້ມເຫຼວຢ່າງໃຫຍ່ຫຼວງຂອງມະນຸດແມ່ນນອນຢູ່ກັບວິທີທີ່ມະນຸດສ້າງຈຸດໝາຍປາຍທາງຕາມອຸດົມຄະຕິຂອງເຂົາເອງ ແລະ ວາງແຜນຫາວິທີທີ່ຈະຮັບພອນອັນຍິ່ງໃຫຍ່ທີ່ສຸດ ແລະ ຈຸດໝາຍປາຍທາງທີ່ດີທີ່ສຸດ ໃນເວລາດຽວກັນກັບທີ່ສະແຫວງຫາເພື່ອຍອມອ່ອນນ້ອມຕໍ່ພຣະເຈົ້າ ແລະ ນະມັດສະການພຣະອົງ. ເຖິງແມ່ນຄົນໆໜຶ່ງຈະເຂົ້າໃຈວ່າ ພວກເຂົາເປັນຕາສັງເວດ, ໜ້າລັງກຽດ ແລະ ໜ້າເວດທະນາພຽງໃດ, ມີຈັກຄົນພ້ອມທີ່ຈະສາມາດປະຖິ້ມອຸດົມຄະຕິ ແລະ ຄວາມຫວັງຂອງຂອງພວກເຂົາ? ແລ້ວຜູ້ໃດສາມາດຢຸດບາດກ້າວຂອງພວກເຂົາເອງ ແລະ ຢຸດຄິດພຽງແຕ່ຜົນປະໂຫຍດຂອງຕົນເອງ? ພຣະເຈົ້າຕ້ອງການຜູ້ຄົນທີ່ຈະຮ່ວມມືກັບພຣະອົງຢ່າງໃກ້ຊິດເພື່ອສຳເລັດການຄຸ້ມຄອງຂອງພຣະອົງ. ພຣະອົງຕ້ອງການຄົນທີ່ຈະຍອມຕໍ່ພຣະອົງໂດຍການອຸທິດຄວາມຄິດ ແລະ ຮ່າງກາຍທັງໝົດຂອງພວກເຂົາໃຫ້ກັບພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ. ພຣະອົງບໍ່ຕ້ອງການຜູ້ຄົນທີ່ແບມືຂໍທານຈາກພຣະອົງທຸກວັນ, ແຮງໄກທີ່ຈະຕ້ອງການຄົນທີ່ໃຫ້ໜ້ອຍດຽວ ແລະ ຫຼັງຈາກນັ້ນກໍລໍຖ້າຮັບເອົາລາງວັນ. ພຣະເຈົ້າກຽດຊັງຄົນທີ່ປະກອບສ່ວນພຽງໜ້ອຍດຽວ ແລະ ຫຼັງຈາກນັ້ນກໍນອນຢູ່ກັບກຽດຕິຍົດຂອງພວກເຂົາ. ພຣະເຈົ້າກຽດຊັງຜູ້ຄົນເລືອດເຢັນເຫຼົ່ານີ້ທີ່ບໍ່ພໍໃຈກັບພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ ແລະ ມີແຕ່ຢາກເວົ້າກ່ຽວກັບການໄປສະຫວັນ ແລະ ການຮັບພອນ. ພຣະອົງມີຄວາມກຽດຊັງທີ່ຫຼາຍຂຶ້ນສຳລັບຄົນທີ່ສວຍໂອກາດທີ່ຖືກນຳສະເໜີໂດຍພາລະກິດທີ່ພຣະອົງປະຕິບັດເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ. ນັ້ນກໍຍ້ອນວ່າ ຜູ້ຄົນເຫຼົ່ານີ້ບໍ່ເຄີຍສົນໃຈໃນສິ່ງທີ່ພຣະເຈົ້າປາຖະໜາຈະບັນລຸ ແລະ ໄດ້ຮັບຜ່ານພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ. ພວກເຂົາພຽງເປັນຫ່ວງກັບວິທີທີ່ພວກເຂົາສາມາດໃຊ້ໂອກາດທີ່ສະໜອງໃຫ້ໂດຍພາລະກິດຂອງພຣະເຈົ້າເພື່ອການຮັບພອນ. ພວກເຂົາບໍ່ສົນໃຈຫົວໃຈຂອງພຣະເຈົ້າ, ໝົກມຸ້ນຢູ່ກັບເລື່ອງອະນາຄົດ ແລະ ຊະຕາກຳຂອງພວກເຂົາເອງທັງສິ້ນ. ຄົນທີ່ບໍ່ພໍໃຈກັບພາລະກິດແຫ່ງການຄຸ້ມຄອງຂອງເຈົ້າ ແລະ ບໍ່ເຄີຍສົນໃຈແມ່ນແຕ່ໜ້ອຍດຽວໃນວິທີ

ທີ່ພຣະເຈົ້າຊ່ວຍມະນຸດຊາດໃຫ້ລອດພົ້ນ ແລະ ຄວາມປະສົງຂອງພຣະອົງ ແມ່ນລ້ວນແລ້ວແຕ່ເຮັດໃນສິ່ງທີ່ເຮັດໃຫ້ພວກເຂົາເອງພໍໃຈ ໃນລັກສະນະທີ່ບໍ່ກ່ຽວຂ້ອງກັບພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າ. ພຶດຕິກຳຂອງພວກເຂົາບໍ່ໄດ້ຖືກຈົດຈຳ ຫຼື ເຫັນດີເຫັນພ້ອມໂດຍພຣະເຈົ້າ, ແຮງໄກທີ່ພຣະອົງຈະເບິ່ງພຶດຕິກຳນັ້ນຢ່າງເພິ່ງພໍໃຈ.

ໃນຈັກກະວານອັນກວ້າງໃຫຍ່ໄພສານ ແລະ ທ້ອງຟ້າ, ສິ່ງມີຊີວິດຈຳນວນຫຼວງຫຼາຍຈົນນັບບໍ່ຖ້ວນໄດ້ດຳລົງຊີວິດ ແລະ ຂະຫຍາຍພັນ, ປະຕິບັດຕາມກົດເກນແຫ່ງຊີວິດທີ່ໝູນວຽນໄປມາ ແລະ ຍຶດໝັ້ນກັບກົດລະບຽບໜຶ່ງຢ່າງທີ່ບໍ່ເຄີຍປ່ຽນແປງ. ຜູ້ທີ່ຕາຍກໍຕາຍໄປພ້ອມເລື່ອງລາວຂອງການດຳລົງຊີວິດ ແລະ ຜູ້ທີ່ຍັງດຳລົງຊີວິດເຮັດຊໍ້າຮອຍປະຫວັດສາດທີ່ເປັນຕາສະລົດໃຈແບບດຽວກັນກັບຄົນທີ່ຈິບຫາຍ. ແລ້ວດ້ວຍເຫດນັ້ນ ມະນຸດຊາດຈຶ່ງບໍ່ສາມາດເຮັດຫຍັງໄດ້ ນອກຈາກຖາມຕົນເອງວ່າ: ເປັນຫຍັງພວກເຮົາຈຶ່ງມີຊີວິດ? ແລ້ວເປັນຫຍັງພວກເຮົາຕ້ອງຕາຍ? ແມ່ນໃຜບັນຊາການໂລກນີ້? ແມ່ນໃຜສ້າງມະນຸດຊາດນີ້? ມະນຸດຊາດຖືກສ້າງຂຶ້ນໂດຍແມ່ນທຳມະຊາດແທ້ໆບໍ? ມະນຸດຊາດຄວບຄຸມຊະຕາກຳຂອງເຂົາເອງແທ້ໆບໍ? ... ສິ່ງເຫຼົ່ານີ້ແມ່ນຄຳຖາມທີ່ມະນຸດຊາດໄດ້ຖາມໂດຍບໍ່ສິ້ນສຸດເປັນເວລາຫຼາຍພັນປີ. ໜ້າເສຍດາຍ ຍິ່ງມະນຸດໝົກມຸ້ນກັບຄຳຖາມເຫຼົ່ານີ້ຫຼາຍເທົ່າໃດ, ເຂົາຍິ່ງເລີ່ມມີຄວາມກະຫາຍຫາວິທະຍາສາດຫຼາຍເທົ່ານັ້ນ. ວິທະຍາສາດສະໜອງຄວາມພໍໃຈສັ້ນໆ ແລະ ຄວາມສຸກໃຈຂອງຮ່າງກາຍພຽງຊົ່ວຄາວ, ແຕ່ບໍ່ພຽງພໍທີ່ຈະປົດປ່ອຍມະນຸດຈາກຄວາມເປົ່າປ່ຽວ, ຄວາມໂດດດ່ຽວ, ຄວາມຢ້ານກົວທີ່ຍາກຈະປົກປິດ ແລະ ຄວາມໝົດຫວັງທີ່ຝັງເລິກຢູ່ພາຍໃນວິນຍານຂອງເຂົາ. ມະນຸດຊາດພຽງໃຊ້ຄວາມຮູ້ທາງດ້ານວິທະຍາສາດທີ່ເຂົາສາມາດເບິ່ງເຫັນດ້ວຍຕາເປົ່າຂອງເຂົາ ແລະ ເຂົ້າໃຈດ້ວຍມັນສະໝອງຂອງເຂົາເພື່ອປອບໃຈຂອງເຂົາ. ແຕ່ຄວາມຮູ້ດ້ານວິທະຍາສາດດັ່ງກ່າວບໍ່ພຽງພໍທີ່ຈະຢຸດມະນຸດຈາກການຄົ້ນຄວ້າຄວາມລຶກລັບໄດ້. ມະນຸດຊາດບໍ່ຮູ້ຈັກແທ້ໆວ່າໃຜເປັນຜູ້ປົກຄອງຈັກກະວານ ແລະ ສິ່ງທັງປວງ, ແຮງໄກທີ່ພວກເຂົາຈະຮູ້ຈັກການເລີ່ມຕົ້ນ ແລະ ອະນາຄົດຂອງມະນຸດຊາດ. ມະນຸດພຽງແຕ່ໃຊ້ຊີວິດ, ດ້ວຍຄວາມຈຳເປັນໃນທ່າມກາງກົດເກນນີ້. ບໍ່ມີໃຜສາມາດຫຼົບໜີກົດເກນນີ້ ແລະ ບໍ່ມີໃຜສາມາດປ່ຽນແປງມັນໄດ້ ເພາະວ່າໃນທ່າມກາງສິ່ງທັງປວງ ແລະ ໃນສະຫວັນ ແມ່ນມີພຣະເຈົ້າອົງດຽວຈາກນິດນິລັນສູ່ນິລັນດອນ ຜູ້ທີ່ມີອຳນາດອະທິປະໄຕເໜືອທຸກສິ່ງ. ພຣະອົງເປັນຜູ້ທີ່ມະນຸດບໍ່ເຄີຍເຫັນຈັກເທື່ອ, ເປັນຜູ້ທີ່ມະນຸດບໍ່ເຄີຍຮູ້ຈັກ, ເປັນຜູ້ທີ່ມະນຸດບໍ່ເຄີຍເຊື່ອໃນການເປັນຢູ່ຂອງພຣະອົງ, ພຣະອົງກໍເປັນຜູ້ທີ່ສູບລົມຫາຍໃຈເຂົ້າສູ່ບັນພະບຸລຸດຂອງມະນຸດຊາດ ແລະ ມອບຊີວິດໃຫ້ແກ່ມະນຸດຊາດ. ພຣະອົງຄືຜູ້ທີ່ສະໜອງ ແລະ ລໍ້ລ້ຽງມະນຸດຊາດ ປ່ອຍໃຫ້ເຂົາມີຊີວິດຢູ່; ແລະ ພຣະອົງເປັນຜູ້ທີ່ຊີ້ນຳມະນຸດຊາດຈົນມາເຖິງທຸກວັນນີ້. ຍິ່ງໄປກວ່ານັ້ນ, ພຣະອົງ ແລະ ພຣະອົງຜູ້ດຽວຄືຜູ້ທີ່ມະນຸດຊາດເພິ່ງພາອາໄສເພື່ອຄວາມຢູ່ລອດ. ພຣະອົງຖືອຳນາດອະທິປະໄຕເໜືອສິ່ງທັງປວງ ແລະ ປົກຄອງທຸກສິ່ງທີ່ມີຊີວິດຢູ່ໃນຈັກກະວານ. ພຣະອົງບັນຊາລະດູການທັງສີ່ ແລະ ພຣະອົງເປັນຜູ້ທີ່ເອີ້ນລົມ, ນໍ້າກ້າມ, ຫິມະ ແລະ ຝົນ. ພຣະອົງນຳແສງຕາເວັນມາໃຫ້ແກ່ມະນຸດຊາດ ແລະ ນຳໄປສູ່ກາງຄືນ. ພຣະອົງເປັນຜູ້ທີ່ປັ້ນແຕ່ງສະຫວັນ ແລະ ແຜ່ນດິນໂລກ, ໂດຍມອບພູເຂົາ,

ທະເລສາບ ແລະ ແມ່ນ້ຳລຳທານ ແລະ ສິ່ງທັງປວງທີ່ຢູ່ພາຍໃນພວກມັນໃຫ້ແກ່ມະນຸດ. ການກະທຳຂອງພຣະອົງຢູ່ທົ່ວທຸກຫົນແຫ່ງ, ລິດອຳນາດຂອງພຣະອົງຢູ່ທົ່ວທຸກຫົນແຫ່ງ, ສະຕິປັນຍາຂອງພຣະອົງຢູ່ທົ່ວທຸກຫົນແຫ່ງ ແລະ ສິດອຳນາດຂອງພຣະອົງຢູ່ທຸກຫົນແຫ່ງ. ແຕ່ລະກົດເກນ ແລະ ກົດລະບຽບເຫຼົ່ານີ້ຄືຈຸດສູນລວມຂອງການກະທຳຂອງພຣະອົງ ແລະ ແຕ່ລະຢ່າງເປີດເຜີຍສະຕິປັນຍາ ແລະ ສິດອຳນາດຂອງພຣະອົງ. ມີໃຜແດ່ທີ່ສາມາດຍົກເວັ້ນຕົນເອງອອກຈາກອຳນາດອະທິປະໄຕຂອງພຣະອົງໄດ້? ແລ້ວໃຜສາມາດຍົກເວັ້ນຕົນເອງອອກຈາກການອອກແບບຂອງພຣະອົງ? ທຸກສິ່ງມີຊີວິດແມ່ນຢູ່ພາຍໃຕ້ການເບິ່ງແຍງຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ສິ່ງທັງປວງແມ່ນຢູ່ພາຍໃຕ້ອຳນາດອະທິປະໄຕຂອງພຣະອົງ. ການກະທຳ ແລະ ລິດອຳນາດຂອງພຣະອົງປ່ອຍໃຫ້ມະນຸດບໍ່ມີທາງເລືອກນອກຈາກຮັບຮູ້ຂໍ້ແທ້ຈິງທີ່ວ່າ ພຣະອົງດຳລົງຢູ່ແທ້ໆ ແລະ ມີສິດອຳນາດອະທິປະໄຕສິ່ງທັງປວງ. ນອກຈາກພຣະອົງແລ້ວບໍ່ມີສິ່ງໃດສາມາດບັນຊາຈັກກະວານໄດ້, ແຮງໄກທີ່ສິ່ງເຫຼົ່ານັ້ນຈະສາມາດສະໜອງໃຫ້ແກ່ມະນຸດຊາດໄດ້. ບໍ່ວ່າເຈົ້າຈະສາມາດຮັບຮູ້ການກະທຳຂອງພຣະເຈົ້າ ຫຼື ບໍ່ ແລະ ບໍ່ວ່າເຈົ້າຈະເຊື່ອໃນການເປັນຢູ່ຂອງພຣະເຈົ້າ ຫຼື ບໍ່, ບໍ່ມີຂໍ້ສົງໄສເລີຍທີ່ໂຊກຊະຕາຂອງເຈົ້າຖືກກຳນົດໂດຍພຣະເຈົ້າ ແລະ ບໍ່ມີຂໍ້ສົງໄສເລີຍທີ່ພຣະເຈົ້າມີສິດອຳນາດອະທິປະໄຕເໜືອທຸກສິ່ງຢູ່ສະເໝີ. ການເປັນຢູ່ ແລະ ສິດອຳນາດຂອງພຣະອົງບໍ່ໄດ້ຖືກສະແດງບົນຂໍ້ແທ້ຈິງທີ່ວ່າ ສິ່ງເຫຼົ່ານັ້ນຈະຖືກຮັບຮູ້ ແລະ ເຂົ້າໃຈໂດຍມະນຸດ ຫຼື ບໍ່. ພຣະອົງເທົ່ານັ້ນທີ່ຮູ້ຈັກອະດີດ, ປັດຈຸບັນ ແລະ ອະນາຄົດຂອງມະນຸດ ແລະ ມີແຕ່ພຣະອົງເທົ່ານັ້ນທີ່ສາມາດກຳນົດຊະຕາກຳຂອງມະນຸດຊາດ. ບໍ່ວ່າເຈົ້າຈະສາມາດຍອມຮັບເອົາຄວາມຈິງນີ້ ຫຼື ບໍ່ກໍຕາມ, ມັນຈະໃຊ້ເວລາອີກບໍ່ດົນ ກ່ອນທີ່ມະນຸດຊາດຈະໄດ້ເຫັນທຸກສິ່ງນີ້ດ້ວຍຕາຂອງເຂົາເອງ ແລະ ນີ້ຄືຂໍ້ແທ້ຈິງທີ່ພຣະເຈົ້າຈະນຳມາໃຫ້ເກີດຂຶ້ນໃນໄວໆນີ້. ມະນຸດຊາດມີຊີວິດ ແລະ ຕາຍຢູ່ພາຍໃຕ້ສາຍຕາຂອງພຣະເຈົ້າ. ມະນຸດມີຊີວິດຢູ່ເພື່ອການຄຸ້ມຄອງຂອງພຣະເຈົ້າ ແລະ ເມື່ອຕາຂອງເຂົາຫຼັບລົງເປັນຄັ້ງສຸດທ້າຍ, ນັ້ນກໍແມ່ນຍ້ອນການຄຸ້ມຄອງນີ້ເຊັ່ນດຽວກັນທີ່ເຮັດໃຫ້ພວກມັນຫຼັບລົງ. ມະນຸດມາ ແລະ ໄປຊ້ຳແລ້ວຊ້ຳອີກ, ຄັ້ງແລ້ວຄັ້ງເລົ່າ. ໂດຍທີ່ບໍ່ມີການຍົກເວັ້ນ, ມັນເປັນສ່ວນທັງໝົດຂອງອຳນາດອະທິປະໄຕ ແລະ ການອອກແບບຂອງພຣະເຈົ້າ. ການຄຸ້ມຄອງຂອງພຣະເຈົ້າແມ່ນບໍ່ເຄີຍສິ້ນສຸດ; ມັນກ້າວໄປຂ້າງໜ້າຊົ່ວນິດນິລັນ. ພຣະອົງຈະເຮັດໃຫ້ມະນຸດຊາດຮັບຮູ້ເຖິງການມີຢູ່ຂອງພຣະອົງ, ໄວ້ວາງໃຈໃນອຳນາດອະທິປະໄຕຂອງພຣະອົງ, ເບິ່ງເຫັນການກະທຳຂອງພຣະອົງ ແລະ ກັບຄືນສູ່ອານາຈັກຂອງພຣະອົງ. ນີ້ຄືແຜນການຂອງພຣະອົງ ແລະ ເປັນພາລະກິດທີ່ພຣະອົງໄດ້ຄຸ້ມຄອງມາເປັນເວລາຫຼາຍພັນປີ.

ພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າເລີ່ມຕົ້ນຈາກການສ້າງໂລກ ແລະ ມະນຸດກໍຄືຈຸດສູນກາງຂອງພາລະກິດນີ້. ມັນສາມາດເວົ້າໄດ້ວ່າ ການທີ່ພຣະເຈົ້າສ້າງສັບພະທຸກສິ່ງນັ້ນແມ່ນເພື່ອມະນຸດ. ຍ້ອນພາລະກິດແຫ່ງການຄຸ້ມຄອງຂອງພຣະອົງກວມເວລາຫຼາຍພັນປີ ແລະ ບໍ່ໄດ້ຖືກເຮັດໃຫ້ສຳເລັດໃນພຽງສ້ຽວນາທີ ຫຼື ວິນາທີ ຫຼື ພຽງພັບຕາ ຫຼື ພາຍໃນປີ ຫຼື ສອງປີເທົ່ານັ້ນ, ພຣະອົງຈຳເປັນຕ້ອງໄດ້ສ້າງສິ່ງຕ່າງໆຫຼາຍຂຶ້ນທີ່ຈຳເປັນສຳລັບຄວາມຢູ່ລອດຂອງມະນຸດ, ເຊັ່ນ: ດວງຕາເວັນ, ດວງ

ເດືອນ, ທຸກສິ່ງທຸກຢ່າງທີ່ມີຊີວິດ, ອາຫານ ແລະ ສະພາບແວດລ້ອມທີ່ເປັນມິດ. ນີ້ຄືການເລີ່ມຕົ້ນແຫ່ງການຄຸ້ມຄອງຂອງພຣະເຈົ້າ.

ຫຼັງຈາກນັ້ນ ພຣະເຈົ້າໄດ້ມອບມະນຸດຊາດໃຫ້ກັບຊາຕານ, ມະນຸດໃຊ້ຊີວິດຢູ່ພາຍໃຕ້ອຳນາດຂອງຊາຕານ ເຊິ່ງພາໄປສູ່ພາລະກິດແຫ່ງຍຸກທຳອິດຂອງພຣະເຈົ້າເທື່ອລະໜ້ອຍ: ເລື່ອງລາວຂອງຍຸກແຫ່ງພຣະບັນຍັດ... ເປັນເວລາຫຼາຍກວ່າສອງສາມພັນປີໃນລະຫວ່າງຍຸກແຫ່ງພຣະບັນຍັດນັ້ນ, ມະນຸດຊາດລຶ້ງເຄີຍກັບການນຳພາຂອງຍຸກແຫ່ງພຣະບັນຍັດ ແລະ ຖືເບົາ. ມະນຸດໄດ້ອອກຈາກການເບິ່ງແຍງດູແລຂອງພຣະເຈົ້າເທື່ອລະໜ້ອຍ. ແລ້ວດ້ວຍເຫດນັ້ນ ໃນຂະນະທີ່ປະຕິບັດຕາມພຣະບັນຍັດພວກເຂົາຍັງນະມັດສະການຮູບປັ້ນບູຊາ ແລະ ປະຕິບັດການກະທຳທີ່ຊົ່ວຮ້າຍ. ພວກເຂົາປາສະຈາກການປົກປ້ອງຂອງພຣະເຢໂຮວາ ແລະ ພຽງແຕ່ໃຊ້ຊີວິດຂອງພວກເຂົາຕໍ່ໜ້າແທ່ນບູຊາໃນພຣະວິຫານເທົ່ານັ້ນ. ໃນຄວາມຈິງແລ້ວ ພາລະກິດຂອງພຣະເຈົ້າແມ່ນໄດ້ອອກຈາກພວກເຂົາແຕ່ດົນນານແລ້ວ ແລະ ເຖິງແມ່ນວ່າຊາວອິດສະຣາເອນຍັງຕິດຢູ່ກັບພຣະບັນຍັດ ແລະ ກ່າວເຖິງນາມຂອງພຣະເຢໂຮວາ ແລະ ເຖິງກັບເຊື່ອຢ່າງເລິກເຊິ່ງວ່າ ມີແຕ່ພວກເຂົາເທົ່ານັ້ນທີ່ເປັນປະຊາຊົນຂອງພຣະເຢໂຮວາ ແລະ ເປັນຄົນທີ່ຖືກເລືອກຂອງພຣະເຢໂຮວາ, ສະຫງ່າລາສີຂອງພຣະເຈົ້າຈຶ່ງໄດ້ປະຖິ້ມພວກເຂົາໄປແບບງຽບໆແລ້ວ...

ເມື່ອພຣະເຈົ້າກະທຳພາລະກິດຂອງພຣະອົງ, ພຣະອົງອອກຈາກບ່ອນໜຶ່ງຢ່າງງຽບໆ ແລະ ຄ່ອຍດຳເນີນພາລະກິດໃໝ່ທີ່ພຣະອົງເລີ່ມຕົ້ນຢູ່ບ່ອນອື່ນ. ນີ້ເບິ່ງຄືວ່າ ເປັນຕາເຫຼືອເຊື່ອສຳລັບຜູ້ຄົນທີ່ຂາດຄວາມຮູ້ສຶກ. ຜູ້ຄົນມັກຈະເຊີດຊູສິ່ງເກົ່າ ແລະ ຖືວ່າສິ່ງໃໝ່, ບໍ່ຄຸ້ນເຄີຍນັ້ນເປັນສັດຕູ ຫຼື ເຫັນສິ່ງເຫຼົ່ານັ້ນເປັນສິ່ງທີ່ລຳຄານ. ແລ້ວດ້ວຍເຫດນັ້ນ ບໍ່ວ່າພຣະເຈົ້າຈະປະຕິບັດພາລະກິດໃໝ່ຫຍັງກໍຕາມຈາກຕົ້ນຈົນຈົບແລ້ວ ມະນຸດຈະເປັນຄົນສຸດທ້າຍທີ່ຢູ່ທ່າມກາງສິ່ງທັງປວງ ທີ່ຈະຮູ້ຈັກເຖິງສິ່ງນັ້ນ.

ດັ່ງທີ່ເຄີຍເປັນມາ, ຫຼັງຈາກພາລະກິດຂອງພຣະເຢໂຮວາໃນຍຸກແຫ່ງພຣະບັນຍັດ, ພຣະເຈົ້າກໍເລີ່ມຕົ້ນພາລະກິດໃໝ່ຂອງຂັ້ນຕອນທີສອງຂອງພຣະອົງ: ການສະຖິດໃນເນື້ອໜັງ ນັ້ນກໍຄື ການບັງເກີດເປັນມະນຸດເປັນຜູ້ຊາຍເປັນເວລາສິບ ຊາວປີ ແລະ ການກ່າວ ແລະ ການປະຕິບັດພາລະກິດຂອງພຣະອົງໃນທ່າມກາງຜູ້ທີ່ເຊື່ອ. ໂດຍບໍ່ມີຂໍ້ຍົກເວັ້ນ, ບໍ່ມີໃຜຮູ້ ແລະ ມີພຽງຄົນຈຳນວນໜ້ອຍທີ່ຮັບຮູ້ວ່າພຣະອົງເປັນພຣະເຈົ້າທີ່ກາຍເປັນເນື້ອໜັງ ຫຼັງຈາກທີ່ພຣະເຢຊູເຈົ້າໄດ້ຖືກຄຶງທີ່ໄມ້ກາງແຂນ ແລະ ຟື້ນຄືນຊີບ. ບັນຫາກໍຄື ປາກົດມີຄົນໜຶ່ງຊື່ ໂປໂລ ທີ່ຕັ້ງຕົນເອງເປັນສັດຕູທາງເນື້ອໜັງກັບພຣະເຈົ້າ. ເຖິງແມ່ນວ່າ ຫຼັງຈາກລາວຖືກຕີໃຫ້ລົ້ມລົງ ແລະ ກາຍມາເປັນອັກຄະສາວົກ, ໂປໂລກໍບໍ່ໄດ້ປ່ຽນທຳມະຊາດເດີມຂອງລາວ ແລະ ລາວໄດ້ສືບຕໍ່ຍ່າງໃນເສັ້ນທາງແຫ່ງການຕໍ່ຕ້ານພຣະເຈົ້າ. ໃນລະຫວ່າງເວລາທີ່ລາວປະຕິບັດພາລະກິດຢູ່ນັ້ນ, ໂປໂລໄດ້ຂຽນຈົດໝາຍຫຼາຍສະບັບ; ໜ້າເສຍດາຍ, ຄົນຮຸ່ນຕໍ່ມາເພີດເພີນກັບຈົດໝາຍຂອງລາວຄືດັ່ງພຣະທຳຂອງພຣະເຈົ້າ ແລະ ພວກມັນຖືກລວມເຂົ້າໃນພຣະສັນຍາໃໝ່ ແລະ ສັບສົນກັບພຣະທຳທີ່ພຣະເຈົ້າໄດ້ກ່າວ. ນີ້ເປັນສິ່ງທີ່ອັບອາຍທີ່ສຸດນັບຕັ້ງແຕ່ການກຳເນີດຂອງພຣະຄຳພີ! ແລ້ວຄວາມຜິດພາດນີ້ບໍ່ໄດ້ເກີດຂຶ້ນຍ້ອນຄວາມໂງ່ທີ່ສຸດຂອງມະນຸດບໍ?

ພວກເຂົາບໍ່ຮູ້ຊໍ້າວ່າ ໃນການບັນທຶກກ່ຽວກັບພາລະກິດຂອງພຣະເຈົ້າໃນຍຸກແຫ່ງພຣະຄຸນນັ້ນ, ຈິດໝາຍ ຫຼື ບົດຂຽນຝ່າຍວິນຍານຂອງມະນຸດບໍ່ຄວນຢູ່ທີ່ນັ້ນແທ້ໆເພື່ອແອບອ້າງເປັນພາລະກິດ ແລະ ພຣະທຳຂອງພຣະເຈົ້າ. ແຕ່ນີ້ກໍຢູ່ນອກປະເດັນ, ສະນັ້ນ ໃຫ້ພວກເຮົາກັບຄືນສູ່ຫົວຂໍ້ເດີມຂອງພວກເຮົາ. ທັນທີທີ່ຂັ້ນຕອນທີສອງຂອງພາລະກິດຂອງພຣະເຈົ້າຖືກເຮັດໃຫ້ສຳເລັດລົງ ຫຼັງຈາກການຖືກຄຶງເທິງໄມ້ກາງແຂນ, ພາລະກິດຂອງພຣະເຈົ້າໃນການກອບກູ້ມະນຸດຈາກຄວາມຜິດບາບ (ເຊິ່ງໝາຍຄວາມວ່າການກອບກູ້ມະນຸດຈາກມືຂອງຊາຕານ) ແມ່ນໄດ້ສຳເລັດລົງແລ້ວ. ແລ້ວດ້ວຍເຫດນັ້ນ, ນັບແຕ່ຊ່ວງເວລານັ້ນເປັນຕົ້ນມາ, ມະນຸດຊາດກໍຕ້ອງໄດ້ຍອມຮັບເອົາພຣະເຢຊູເຈົ້າເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ ແລະ ຄວາມຜິດບາບຂອງເຂົາກໍຈະໄດ້ຮັບການອະໄພ. ເວົ້າໂດຍທົ່ວໄປແລ້ວ, ຄວາມຜິດບາບຂອງມະນຸດກໍແມ່ນບໍ່ໄດ້ເປັນອຸປະສັກໃນການທີ່ເຂົາບັນລຸຄວາມລອດພົ້ນຂອງເຂົາ ແລະ ການມາຢູ່ຕໍ່ໜ້າພຣະເຈົ້າ ແລະ ບໍ່ແມ່ນຂໍ້ອ້າງທີ່ຊາຕານໃຊ້ເພື່ອກ່າວໂທດມະນຸດອີກຕໍ່ໄປ. ນັ້ນກໍຍ້ອນພຣະເຈົ້າເອງໄດ້ປະຕິບັດພາລະກິດທີ່ແທ້ຈິງ, ໄດ້ກາຍມາເປັນລັກສະນະ ແລະ ການຊີມລົດຊາດຂອງເນື້ອໜັງທີ່ຜິດບາບ ແລະ ພຣະເຈົ້າເອງກໍເປັນເຄື່ອງຖວາຍແທນຄວາມຜິດບາບ. ໃນລັກສະນະນີ້, ມະນຸດໄດ້ລົງມາຈາກໄມ້ກາງແຂນ ແລະ ຖືກໄຖ່ ແລະ ຖືກຊ່ວຍໃຫ້ລອດພົ້ນຜ່ານທາງເນື້ອໜັງຂອງພຣະເຈົ້າ ເຊິ່ງກໍຄື ລັກສະນະເນື້ອໜັງທີ່ຜິດບາບນີ້. ແລ້ວສະນັ້ນ, ຫຼັງຈາກຖືກຊາຕານຈັບກຸມ, ມະນຸດຈຶ່ງເລີ່ມເຂົ້າໃກ້ການຍອມຮັບເອົາຄວາມລອດພົ້ນຂອງພຣະອົງຢູ່ຕໍ່ໜ້າພຣະເຈົ້າ. ແນ່ນອນ ຂັ້ນຕອນນີ້ຂອງພາລະກິດເລິກເຊິ່ງ ແລະ ມີການພັດທະນາຫຼາຍກວ່າການຄຸ້ມຄອງຂອງພຣະເຈົ້າໃນລະຫວ່າງຍຸກແຫ່ງພຣະບັນຍັດ.

ສິ່ງດັ່ງກ່າວແມ່ນການຄຸ້ມຄອງຂອງພຣະເຈົ້າ: ເພື່ອມອບມະນຸດຊາດໃຫ້ກັບຊາຕານ, ມະນຸດຊາດທີ່ບໍ່ຮູ້ຈັກວ່າພຣະເຈົ້າແມ່ນຫຍັງ, ພຣະຜູ້ສ້າງແມ່ນຫຍັງ, ວິທີການນະມັດສະການພຣະເຈົ້າ ຫຼື ເປັນຫຍັງມັນຈຶ່ງຈຳເປັນທີ່ຕ້ອງອ່ອນນ້ອມຕໍ່ພຣະເຈົ້າ ແລະ ປ່ອຍໃຫ້ຊາຕານເຮັດໃຫ້ເຂົາເສື່ອມຊາມ. ຫຼັງຈາກນັ້ນ ພຣະເຈົ້າກໍກອບກູ້ເອົາມະນຸດຈາກມືຂອງຊາຕານເທື່ອລະກ້າວ ຈົນມະນຸດນະມັດສະການພຣະເຈົ້າຢ່າງສົມບູນ ແລະ ປະຕິເສດຊາຕານ. ນີ້ຄືການຄຸ້ມຄອງຂອງພຣະເຈົ້າ. ນີ້ອາດຟັງຄືນິທານເທບນິຍາຍ ແລະ ມັນອາດເບິ່ງຄືສັບສົນ. ຜູ້ຄົນຮູ້ສຶກວ່າ ນີ້ແມ່ນນິທານເທບນິຍາຍ ຍ້ອນພວກເຂົາບໍ່ຮູ້ຫຍັງເລີຍວ່າ ມີຈັກຢ່າງແນ່ທີ່ເກີດຂຶ້ນກັບມະນຸດຕະຫຼອດເວລາຫຼາຍສອງສາມພັນປີທີ່ຜ່ານມາ ແຮງໄກທີ່ພວກເຂົາຮູ້ວ່າ ມີຈັກເລື່ອງທີ່ເກີດຂຶ້ນໃນຈັກກະວານ ແລະ ທ້ອງຟ້າ. ແລ້ວຍິ່ງໄປກວ່ານັ້ນ, ນັ້ນກໍຍ້ອນວ່າພວກເຂົາບໍ່ສາມາດຊື່ນຊົມໂລກທີ່ອັດສະຈັນຫຼາຍກວ່າ, ເປັນຕາຢ້ານກົວຫຼາຍກວ່ານີ້ ເຊິ່ງມີຢູ່ນອກເໜືອໂລກແຫ່ງວັດຖຸ ແຕ່ເປັນໂລກທີ່ຕາມະນຸດຂອງພວກເຂົາປິດບັງບໍ່ໃຫ້ພວກເຂົາເບິ່ງເຫັນ. ມັນຮູ້ສຶກວ່າເປັນສິ່ງທີ່ບໍ່ສາມາດເຂົ້າໃຈໄດ້ສຳລັບມະນຸດ ຍ້ອນມະນຸດບໍ່ມີຄວາມເຂົ້າໃຈກ່ຽວກັບຄວາມສຳຄັນແຫ່ງຄວາມລອດພົ້ນຂອງພຣະເຈົ້າສຳລັບມະນຸດ ຫຼື ຄວາມສຳຄັນຂອງພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ ແລະ ບໍ່ເຂົ້າໃຈໃນວິທີການທີ່ພຣະເຈົ້າປາຖະໜາໃຫ້ມະນຸດຊາດເປັນໃນທີ່ສຸດ. ມັນບໍ່ໄດ້ຖືກຊາຕານເຮັດໃຫ້ເສື່ອມຊາມທັງໝົດ ຄືກັບອາດາມ ແລະ ເອວາບໍ? ບໍ່! ເປົ້າໝາຍແຫ່ງການຄຸ້ມຄອງຂອງພຣະເຈົ້າແມ່ນເພື່ອຮັບເອົາກຸ່ມຄົນ ທີ່ນະມັດສະການພຣະເຈົ້າ ແລະ

ຍອມອ່ອນນ້ອມຕໍ່ພຣະອົງ. ເຖິງແມ່ນຜູ້ຄົນເຫຼົ່ານີ້ຖືກຊາຕານເຮັດໃຫ້ເສື່ອມຊາມ, ພວກເຂົາກໍບໍ່ເຫັນຊາຕານເປັນພໍ່ຂອງພວກເຂົາອີກຕໍ່ໄປ; ພວກເຂົາຮັບຮູ້ເຖິງໃບໜ້າທີ່ເປັນຕາລັງກຽດຂອງຊາຕານ ແລະ ປະຕິເສດມັນ ແລະ ພວກເຂົາໄດ້ມາຢູ່ຕໍ່ໜ້າພຣະເຈົ້າເພື່ອຍອມຮັບເອົາການພິພາກສາ ແລະ ການຂ້ຽນຕີຂອງພຣະເຈົ້າ. ພວກເຂົາມາຮູ້ຈັກສິ່ງທີ່ຂີ້ຮ້າຍ ແລະ ມັນແຕກຕ່າງຈາກສິ່ງທີ່ບໍລິສຸດແນວໃດ ແລະ ຮັບຮູ້ເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ ແລະ ຄວາມຊົ່ວຮ້າຍຂອງຊາຕານ. ມະນຸດຊາດແບບນີ້ຈະບໍ່ປະຕິບັດພາລະກິດສຳລັບຊາຕານ ຫຼື ນະມັດສະການຊາຕານ ຫຼື ບູຊາຊາຕານ. ນີ້ກໍຍ້ອນວ່າພວກເຂົາເປັນກຸ່ມຄົນທີ່ຖືກຮັບເອົາໂດຍພຣະເຈົ້າຢ່າງແທ້ຈິງ. ນີ້ຄືຄວາມສຳຄັນຂອງພາລະກິດໃນການຄຸ້ມຄອງມະນຸດຊາດຂອງພຣະເຈົ້າ. ໃນລະຫວ່າງພາລະກິດແຫ່ງການຄຸ້ມຄອງຂອງພຣະເຈົ້າໃນເວລານີ້, ມະນຸດຊາດຄືເປັນທັງເປົ້າໝາຍຂອງຄວາມເສື່ອມຊາມຂອງຊາຕານ ແລະ ຄວາມລອດພົ້ນຂອງພຣະເຈົ້າ ແລະ ມະນຸດຄືຜົນທີ່ພຣະເຈົ້າ ແລະ ຊາຕານຕໍ່ສູ້ກັນ. ໃນຂະນະທີ່ພຣະເຈົ້າປະຕິບັດພາລະກິດຂອງພຣະອົງ, ພຣະອົງກໍກອບກູ້ເອົາມະນຸດຈາກມືຂອງຊາຕານເທື່ອລະໜ້ອຍ ແລະ ດ້ວຍເຫດນັ້ນ ມະນຸດຈຶ່ງເຂົ້າມາໃກ້ກັບພຣະເຈົ້າຫຼາຍຂຶ້ນ...

ແລ້ວຫຼັງຈາກນັ້ນຍຸກແຫ່ງລາຊະອານາຈັກກໍມາເຖິງ ເຊິ່ງເປັນຂັ້ນຕອນທີ່ເປັນຈິງຫຼາຍຂຶ້ນຂອງພາລະກິດ ແລະ ເປັນຂັ້ນຕອນທີ່ມະນຸດຍອມຮັບໄດ້ຍາກທີ່ສຸດ. ນັ້ນກໍຍ້ອນຈາກວ່າ ຍິ່ງມະນຸດຄົນນັ້ນມາຢູ່ໃກ້ພຣະເຈົ້າຫຼາຍເທົ່າໃດ ໄມ້ຄ້ອນຂອງພຣະເຈົ້າກໍຍິ່ງເຂົ້າໃກ້ມະນຸດຫຼາຍເທົ່ານັ້ນ ແລະ ໃບຕາຂອງພຣະເຈົ້າກໍຖືກເປີດເຜີຍຢ່າງຊັດເຈນຕໍ່ມະນຸດຫຼາຍສໍ່ານັ້ນ. ພາຍຫຼັງຈາກການໄຖ່ບາບຂອງມະນຸດຊາດ, ມະນຸດໄດ້ກັບຄືນມາຫາຄອບຄົວຂອງພຣະເຈົ້າຢ່າງເປັນທາງການ. ມະນຸດຄິດວ່າຕອນນີ້ຄືເວລາສຳລັບຄວາມເພີດເພີນ ແຕ່ເຂົາກໍຕ້ອງຕົກຢູ່ພາຍໃຕ້ການໂຈມຕີໃນແນວໜ້າຢ່າງສາຫັດໂດຍພຣະເຈົ້າ ເຊິ່ງເປັນການໂຈມຕີທີ່ບໍ່ມີຜູ້ໃດເຄີຍເຫັນມາກ່ອນ: ແຕ່ມັນກາຍເປັນວ່າ ນີ້ຄືການຮັບບັບຕິດສະມາທີ່ປະຊາຊົນຂອງພຣະເຈົ້າຕ້ອງໄດ້ "ເພີດເພີນ". ພາຍໃຕ້ການປະຕິບັດດັ່ງກ່າວ, ຜູ້ຄົນບໍ່ມີທາງເລືອກແຕ່ຕ້ອງໄດ້ຢຸດ ແລະ ຄິດກັບຕົນເອງວ່າ: "ຂ້ານ້ອຍເປັນລູກແກະທີ່ຫຼົງທາງເປັນເວລາຫຼາຍປີ ເຊິ່ງພຣະເຈົ້າໄດ້ເສຍສະຫຼະຫຼາຍຢ່າງເພື່ອຊື້ກັບຄືນ, ແລ້ວເປັນຫຍັງພຣະເຈົ້າຈຶ່ງປະຕິບັດຕໍ່ຂ້ານ້ອຍແບບນີ້? ມັນເປັນວິທີທີ່ພຣະເຈົ້າຫົວຂວັນຂ້ານ້ອຍ ແລະ ເປີດໂປງຂ້ານ້ອຍບໍ? ..." ຫຼັງຈາກຫຼາຍປີຜ່ານໄປ, ມະນຸດໄດ້ກາຍເປັນຄົນທີ່ຜ່ານຮ້ອນຜ່ານໜາວ, ໄດ້ຜະເຊີນກັບຄວາມລຳບາກຂອງການຫຼໍ່ຫຼອມ ແລະ ການຂ້ຽນຕີ. ເຖິງແມ່ນວ່າມະນຸດໄດ້ສູນເສຍ "ສະຫງ່າລາສີ" ແລະ "ຄວາມຮັກ" ໃນເວລາທີ່ຜ່ານໄປ, ເຂົາກໍໄດ້ມາເຂົ້າໃຈຫຼັກການແຫ່ງຄວາມປະພຶດຂອງມະນຸດໂດຍບໍ່ຮູ້ຕົວ ແລະ ໄດ້ມາຊື່ນຊົມປີແຫ່ງການອຸທິດຂອງພຣະເຈົ້າເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນ. ມະນຸດເລີ່ມກຽດຊັງຄວາມໂຫດຮ້າຍຂອງເຂົາເອງຢ່າງຊ້າໆ. ເຂົາເລີ່ມຊັງຄວາມໂຫດຮ້າຍທີ່ເຂົາເປັນ, ຄວາມເຂົ້າໃຈຜິດທັງໝົດທີ່ມີຕໍ່ພຣະເຈົ້າ ແລະ ການຮຽກຮ້ອງທີ່ບໍ່ສົມເຫດສົມຜົນທີ່ເຂົາມີຕໍ່ພຣະອົງ. ໂມງບໍ່ສາມາດຫວນຄືນໄດ້. ເຫດການໃນອະດີດກາຍເປັນຄວາມຊົງຈຳທີ່ໜ້າເສຍດາຍຂອງມະນຸດ ແລະ ພຣະທຳ ແລະ ຄວາມຮັກຂອງພຣະເຈົ້າກາຍເປັນພະລັງຂັບເຄື່ອນໃນການມີຊີວິດໃໝ່ຂອງມະນຸດ. ບາດແຜຂອງມະນຸດຮັກສາໃຫ້ດີຂຶ້ນໃນ

ແຕ່ລະມື້, ພາລະກຳລັງຂອງເຂົາໄດ້ກັບຄືນມາ ແລະ ເຂົາລຸກຢືນຂຶ້ນ ແລະ ເງີຍໜ້າເບິ່ງໃບໜ້າຂອງອົງຊົງລິດທານຸພາບສູງສຸດ... ພຽງແຕ່ໄດ້ຄົ້ນພົບວ່າຮອຍຍິ້ມຂອງພຣະອົງ ແລະ ໃບໜ້າທີ່ສວຍງາມຂອງພຣະອົງຍັງມີຊີວິດຊີວາ. ຫົວໃຈຂອງພຣະອົງຍັງເປັນຫ່ວງມະນຸດຊາດທີ່ພຣະອົງສ້າງ ແລະ ມືຂອງພຣະອົງຍັງອົບອຸ່ນ ແລະ ມີພະລັງຄືທີ່ເປັນໃນຕອນເລີ່ມຕົ້ນ. ມັນເປັນຄືດັ່ງວ່າມະນຸດໄດ້ກັບຄືນສູ່ສວນເອເດັນອີກຄັ້ງ ແຕ່ເທື່ອນີ້ມະນຸດບໍ່ໄດ້ເຊື່ອຟັງການລໍ້ລວງຂອງງູອີກຕໍ່ໄປ ແລະ ບໍ່ໄດ້ຫັນໜີຈາກໃບໜ້າຂອງພຣະເຢໂຮວາອີກຕໍ່ໄປ. ມະນຸດຄຸເຂົ່າລົງຕໍ່ໜ້າພຣະເຈົ້າ, ເງີຍໜ້າເບິ່ງໃບໜ້າອັນຍິ້ມແຍ້ມຂອງພຣະເຈົ້າ ແລະ ຖວາຍການເສຍສະຫຼະທີ່ມີຄຸນຄ່າທີ່ສຸດຂອງເຂົາ, ໂອ! ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ພຣະເຈົ້າຂອງຂ້ານ້ອຍ!

ຄວາມຮັກ ແລະ ຄວາມສົງສານຂອງພຣະເຈົ້າຊຶມຜ່ານທຸກລາຍລະອຽດໃນພາລະກິດແຫ່ງການຄຸ້ມຄອງຂອງພຣະອົງ ແລະ ບໍ່ວ່າຜູ້ຄົນຈະສາມາດເຂົ້າໃຈເຈດຕະນາທີ່ດີຂອງພຣະເຈົ້າ ຫຼື ບໍ່, ພຣະອົງຍັງປະຕິບັດພາລະກິດທີ່ພຣະອົງຕັ້ງໃຈກະທຳໃຫ້ສຳເລັດຢ່າງບໍ່ອິດເມື່ອຍ. ບໍ່ວ່າຜູ້ຄົນຈະເຂົ້າໃຈກ່ຽວກັບການຄຸ້ມຄອງຂອງພຣະເຈົ້າຫຼາຍສໍ່າໃດກໍຕາມ, ຄວາມຊ່ວຍເຫຼືອ ແລະ ຜົນປະໂຫຍດທີ່ພາລະກິດຂອງພຣະເຈົ້າໄດ້ນຳມາສູ່ມະນຸດ ແມ່ນສາມາດຊື່ນຊົມໂດຍທຸກຄົນ. ບາງຄັ້ງ, ໃນມື້ນີ້ ເຈົ້າບໍ່ໄດ້ຮູ້ສຶກກັບຄວາມຮັກ ຫຼື ຊີວິດທີ່ພຣະເຈົ້າສະໜອງໃຫ້, ແຕ່ຕາບໃດທີ່ເຈົ້າບໍ່ປະຖິ້ມພຣະເຈົ້າ ແລະ ບໍ່ຍອມແພ້ຕໍ່ຄວາມຕັ້ງໃຈຂອງເຈົ້າທີ່ຈະສະແຫວງຫາຄວາມຈິງ, ມັນກໍຈະມີມື້ທີ່ຮອຍຍິ້ມຂອງພຣະເຈົ້າຈະຖືກເປີດເຜີຍໃຫ້ແກ່ເຈົ້າ. ຍ້ອນວ່າຈຸດປະສົງຂອງພາລະກິດການຄຸ້ມຄອງຂອງພຣະເຈົ້າແມ່ນເພື່ອກອບກູ້ຜູ້ຄົນທີ່ຢູ່ພາຍໃຕ້ອຳນາດຂອງຊາຕານ, ບໍ່ແມ່ນເພື່ອປະຖິ້ມຜູ້ຄົນທີ່ຖືກຊາຕານເຮັດໃຫ້ເສື່ອມຊາມ ແລະ ຕໍ່ຕ້ານພຣະເຈົ້າ.

ວັນທີ 23 ກັນຍາ 2005

# ພາກພະໜວກ 4
# ເບິ່ງການປາກົດຂອງພຣະເຈົ້າ ໃນການພິພາກສາ ແລະ ການຕີສອນຂອງພຣະອົງ

ຄືກັບຄົນຫຼາຍລ້ານຄົນທີ່ຕິດຕາມພຣະເຢຊູຄຣິດເຈົ້າ, ພວກເຮົາປະຕິບັດຕາມພຣະບັນຍັດ ແລະ ຂໍ້ຄຳສັ່ງຂອງພຣະຄຳພີ, ຮັບພຣະຄຸນທີ່ອຸດົມສົມບູນຂອງພຣະເຢຊູຄຣິດເຈົ້າ ແລະ ເຕົ້າໂຮມກັນ, ອະທິຖານ, ສັນລະເສີນ ແລະ ຮັບໃຊ້ໃນນາມພຣະເຢຊູຄຣິດເຈົ້າ. ພວກເຮົາເຮັດທຸກສິ່ງນີ້ພາຍໃຕ້ການດູແລ ແລະ ການປົກປ້ອງຂອງພຣະຜູ້ເປັນເຈົ້າ. ພວກເຮົາອ່ອນແອຕະຫຼອດ ແລະ ພວກເຮົາກໍເຂັ້ມແຂງຕະຫຼອດເຊັ່ນກັນ. ພວກເຮົາເຊື່ອວ່າການກະທຳຂອງພວກເຮົາທຸກຢ່າງແມ່ນອີງຕາມຄຳສັ່ງສອນຂອງພຣະຜູ້ເປັນເຈົ້າ. ເປັນທີ່ຮູ້ຈັກກັນດີຢູ່ແລ້ວ ທີ່ພວກເຮົາເຊື່ອວ່າຕົນເອງໄດ້ຢູ່ໃນເສັ້ນທາງແຫ່ງການປະຕິບັດຄວາມປະສົງຂອງພຣະບິດາໃນສະຫວັນ. ພວກເຮົາປາຖະໜາເຖິງການກັບມາຂອງອົງພຣະເຢຊູເຈົ້າ, ເຖິງການລົງມາຢ່າງສະຫງ່າງາມຂອງພຣະອົງ, ເຖິງການສິ້ນສຸດຂອງຊີວິດເຮົາເທິງແຜ່ນດິນໂລກ, ເຖິງການປາກົດຂອງອານາຈັກ ແລະ ເຖິງທຸກໆສິ່ງທີ່ທຳນາຍໄວ້ໃນພຣະຄຳພີພຣະນິມິດ: ພຣະຜູ້ເປັນເຈົ້າມາເຖິງ, ພຣະອົງນຳໄພພິບັດ, ພຣະອົງໃຫ້ລາງວັນຄົນທີ່ກະທຳດີ ແລະ ລົງໂທດຄົນທີ່ກະທຳຊົ່ວ; ພຣະອົງຮັບເອົາທຸກຄົນທີ່ຕິດຕາມພຣະອົງ ແລະ ຕ້ອນຮັບການກັບມາຂອງພຣະອົງເພື່ອໄປພົບກັບພຣະອົງໃນທ້ອງຟ້າ. ເມື່ອໃດກໍຕາມທີ່ພວກເຮົາຄິດເຖິງສິ່ງນີ້ ພວກເຮົາບໍ່ສາມາດເຮັດຫຍັງນອກຈາກເຕັມລົ້ນໄປດ້ວຍຄວາມຮູ້ສຶກ, ປິຕິຍິນດີທີ່ພວກເຮົາໄດ້ເກີດໃນຍຸກສຸດທ້າຍ ແລະ ໂຊກດີທີ່ໄດ້ເປັນພະຍານການມາຂອງພຣະຜູ້ເປັນເຈົ້າ. ເຖິງແມ່ນວ່າ ພວກເຮົາໄດ້ທົນທຸກຕໍ່ການຂົ່ມເຫັງ ພວກເຮົາກໍໄດ້ "ທີ່ຫຼັ່ງຫຼອມໃຫ້ພວກເຮົາໄດ້ຮັບລັດສະໝີຢ່າງຫຼວງຫຼາຍເກີນຄຳບັນຍາຍ ແລະ ເປັນນິດນິລັນ". ເປັນການຕອບແທນ. ຊ່າງເປັນພອນປະເສີດແທ້ໆ! ຄວາມປາຖະໜາທັງໝົດນີ້ ແລະ ພຣະຄຸນທີ່ພຣະຜູ້ເປັນເຈົ້າປະທານໃຫ້ໄດ້ເຮັດໃຫ້ພວກເຮົາຮ້ອງໄຫ້ຢູ່ກັບການອະທິຖານຢູ່ຕະຫຼອດເວລາ ແລະ ເຮັດໃຫ້ພວກເຮົາດຸໝັ່ນຍິ່ງຂຶ້ນໃນການເຕົ້າໂຮມກັນ. ບາງເທື່ອປີໜ້າ ບາງເທື່ອມື້ອື່ນ ແລະ ອີກຄັ້ງບາງເທື່ອຢູ່ໃນໄລຍະເວລາທີ່ສັ້ນເກີນກວ່າທີ່ມະນຸດສາມາດຄິດຂຶ້ນໄດ້, ພຣະຜູ້ເປັນເຈົ້າຈະລົງມາຢ່າງກະທັນຫັນ, ປາກົດຕົວທ່າມກາງກຸ່ມຄົນທີ່ກຳລັງລໍຖ້າພຣະອົງດ້ວຍຄວາມກະວົນກະວາຍໃຈຢ່າງຮ້ອນຮົນ. ພວກເຮົາຟ້າວແຊງໜ້າກັນເອງຂຶ້ນໄປ, ບໍ່ມີໃຜປະສົງທີ່ຈະຕົກໄປຢູ່ຂ້າງຫຼັງ, ເຮັດທຸກສິ່ງກໍເພື່ອໄດ້ຢູ່ໃນກຸ່ມທຳອິດທີ່ຈະເຫັນການປາກົດຂອງພຣະຜູ້ເປັນເຈົ້າ, ຢູ່ທ່າມກາງຄົນທີ່ຈະໄດ້ຮັບການຍົກຂຶ້ນສະຫວັນ. ພວກເຮົາໄດ້ມອບທຸກສິ່ງ, ໂດຍບໍ່ໃສ່ໃຈໃນສິ່ງທີ່ຕ້ອງເສຍໄປ, ເພື່ອການມາເຖິງຂອງມື້ນີ້, ບາງຄົນປະຖິ້ມວຽກງານຂອງພວກເຂົາ, ບາງຄົນປະຖິ້ມຄອບຄົວຂອງພວກເຂົາ, ບາງຄົນປະຖິ້ມການແຕ່ງດອງ ແລະ ບາງຄົນເຖິງກັບບໍລິຈາກເງິນສະສົມຂອງພວກເຂົາທັງໝົດ. ຊ່າງເປັນການກະທຳແຫ່ງການອຸທິດແບບບໍ່ຄິດເຖິງຕົນເອງແທ້ໆ! ຄວາມຈິງໃຈ ແລະ ຄວາມຊື່ສັດດັ່ງກ່າວຢູ່ເໜືອແມ່ນແຕ່ໄພ່ພົນທີ່ຢູ່ໃນຍຸກອະດີດອີກ! ຍ້ອນພຣະຜູ້ເປັນເຈົ້າປະທານພຣະຄຸນມາຍັງໃຜກໍຕາມທີ່ພຣະອົງ

ພໍໃຈ ແລະ ສະແດງຄວາມເມດຕາມາຍັງໃຜກໍຕາມທີ່ພຣະອົງພໍໃຈ, ຍ້ອນຕາຂອງພຣະອົງໄດ້ເບິ່ງເຫັນການກະທຳແຫ່ງການອຸທິດ ແລະ ແຫ່ງການເສຍສະຫຼະຂອງພວກເຮົາທີ່ພວກເຮົາເຊື່ອຕັ້ງແຕ່ດົນນານມາແລ້ວ. ເຊັ່ນດຽວກັນນັ້ນ ຄຳອະທິຖານຢ່າງຈິງໃຈຂອງພວກເຮົາກໍໄດ້ໄປເຖິງຫູຂອງພຣະອົງ ແລະພວກເຮົາເຊື່ອວ່າ ພຣະຜູ້ເປັນເຈົ້າຈະຕອບແທນສຳລັບການອຸທິດຕົນຂອງພວກເຮົາ. ຍິ່ງໄປກວ່ານັ້ນພຣະເຈົ້າໄດ້ເມດຕາກັບພວກເຮົາກ່ອນທີ່ພຣະອົງສ້າງໂລກອີກ ແລະ ບໍ່ມີໃຜສາມາດນຳພອນປະເສີດ ແລະ ພຣະສັນຍາທີ່ພຣະອົງມອບໃຫ້ກັບພວກເຮົາອອກໄປຈາກພວກເຮົາໄດ້. ພວກເຮົາທັງໝົດວາງແຜນສຳລັບອະນາຄົດ ແລະ ຍ້ອນມັນເປັນເລື່ອງປົກກະຕິທີ່ຈະເຮັດໃຫ້ການອຸທິດ ແລະ ການເສຍສະຫຼະຂອງພວກເຮົາກາຍເປັນເບ້ຍ ຫຼື ຕົ້ນທຶນເພື່ອແລກປ່ຽນກັບການຖືກຍົກຂຶ້ນເມືອເພື່ອພົບກັບພຣະຜູ້ເປັນເຈົ້າໃນທ້ອງຟ້າ. ນອກຈາກນັ້ນ ພວກເຮົາໄດ້ວາງຕົນເອງເທິງບັນລັງແຫ່ງອະນາຄົດ ໂດຍບໍ່ລັງເລແມ່ນແຕ່ໜ້ອຍດຽວ ເພື່ອປົກຄອງເໜືອຊົນຊາດທັງໝົດ ແລະ ປະຊາຊົນທັງໝົດ ຫຼື ເພື່ອຄອງລາດດັ່ງກະສັດ. ພວກເຮົາຮັບທຸກສິ່ງຕາມທີ່ຖືກມອບໃຫ້ ແລະ ເປັນສິ່ງທີ່ຄາດຫວັງໄວ້.

ພວກເຮົາລັງກຽດທຸກຄົນທີ່ຕໍ່ຕ້ານອົງພຣະເຢຊູເຈົ້າ; ຈຸດຈົບຂອງພວກເຂົາທຸກຄົນຈະແມ່ນຄວາມພິນາດ. ແມ່ນໃຜທີ່ບອກພວກເຂົາບໍ່ໃຫ້ເຊື່ອວ່າ ພຣະເຢຊູເຈົ້າເປັນພຣະຜູ້ໄຖ່? ແນ່ນອນ ມີຫຼາຍຄັ້ງທີ່ພວກເຮົາລອກແບບພຣະເຢຊູເຈົ້າໃນການສະແດງຄວາມອົດທົນຕໍ່ປະຊາຊົນໃນໂລກນີ້, ຍ້ອນພວກເຂົາບໍ່ເຂົ້າໃຈ ແລະ ມັນເປັນເລື່ອງຖືກຕ້ອງທີ່ພວກເຮົາອົດກັ້ນ ແລະ ໃຫ້ອະໄພພວກເຂົາ. ທຸກສິ່ງທີ່ພວກເຮົາເຮັດແມ່ນສອດຄ່ອງກັບພຣະທຳແຫ່ງພຣະຄຳພີ, ຍ້ອນທຸກສິ່ງທີ່ບໍ່ສອດຄ່ອງກັບພຣະຄຳພີແມ່ນສິ່ງທີ່ນອກສາສະໜາ ແລະ ເປັນຄວາມເຫັນທີ່ນອກຮີດ. ຄວາມເຊື່ອປະເພດນີ້ຖືກຝັງເລິກຢູ່ໃນຈິດໃຈຂອງພວກເຮົາທຸກຄົນ. ພຣະຜູ້ເປັນເຈົ້າຂອງພວກເຮົາຢູ່ໃນພຣະຄຳພີ ແລະ ຖ້າພວກເຮົາບໍ່ອອກຈາກພຣະຄຳພີ ພວກເຮົາກໍຈະບໍ່ອອກຈາກພຣະຜູ້ເປັນເຈົ້າ; ຖ້າພວກເຮົາປະຕິບັດຕາມຫຼັກການນີ້, ພວກເຮົາຈະໄດ້ຮັບຄວາມລອດພົ້ນ. ພວກເຮົາໃຫ້ກຳລັງໃຈກັນແລະກັນ, ສິ່ງເສີມເຊິ່ງກັນແລະກັນ ແລະ ທຸກໆຄັ້ງທີ່ພວກເຮົາເຕົ້າໂຮມກັນ, ພວກເຮົາກໍ່ຫວັງວ່າທຸກສິ່ງທີ່ພວກເຮົາໄດ້ກ່າວ ແລະເຮັດແມ່ນສອດຄ່ອງກັບຄວາມປະສົງຂອງພຣະຜູ້ເປັນເຈົ້າ ແລະ ຈະຖືກຍອມຮັບໂດຍພຣະຜູ້ເປັນເຈົ້າ. ເຖິງແມ່ນສະພາບແວດລ້ອມຈະເຕັມໄປດ້ວຍຄວາມຕໍ່ຕ້ານຢ່າງຮຸນແຮງ, ຫົວໃຈຂອງພວກເຮົາກໍເຕັມໄປດ້ວຍຄວາມຊື່ນຊົມຍິນດີ. ເມື່ອພວກເຮົາຄິດວ່າການໄດ້ຮັບພອນແມ່ນຢູ່ພຽງປາຍນິ້ວມືເທົ່ານັ້ນ, ມີສິ່ງໃດແດ່ທີ່ພວກເຮົາບໍ່ສາມາດຢຸດໄວ້ກ່ອນໄດ້? ມີສິ່ງໃດແດ່ທີ່ພວກເຮົາລັງເລໃຈໜີປະ? ທຸກຢ່າງແມ່ນຊັດເຈນຢູ່ແລ້ວ ແລະ ທຸກຢ່າງຢູ່ພາຍໃຕ້ສາຍຕາຂອງພຣະເຈົ້າ. ພວກເຮົາ ເຊິ່ງເປັນຄົນຂັດສົນຈຳນວນເລັກນ້ອຍທີ່ຖືກຍົກຂຶ້ນຈາກກອງຂີ້ສັດ ບໍ່ຕ່າງຫຍັງກັບຜູ້ຕິດຕາມທຳມະດາທັງໝົດຂອງພຣະເຢຊູເຈົ້າ ທີ່ມີຄວາມຝັນຈະໄດ້ຮັບການຍົກຂຶ້ນສູ່ທ້ອງຟ້າ, ໄດ້ຮັບການອວຍພອນ ແລະ ປົກຄອງປະຊາຊາດທັງໝົດ. ຄວາມເສື່ອມຊາມຂອງພວກເຮົາຖືກເປີດເຜີຍໃນສາຍຕາຂອງພຣະເຈົ້າ ແລະຄວາມປາຖະໜາ ແລະ ຄວາມໂລບມາກໂລພາຂອງພວກເຮົາຖືກຕັດສິນລົງໂທດໃນສາຍຕາຂອງພຣະເຈົ້າ. ເຖິງຢ່າງໃດກໍ່ຕາມ, ທຸກສິ່ງນີ້ເກີດຂຶ້ນເປັນປົກກະຕິຫຼາຍ ແລະ ມີເຫດຜົນຫຼາຍຈົນບໍ່ມີໃຜ

ໃນບັນດາພວກເຮົາທີ່ສົງໄສວ່າຄວາມປາຖະໜາຂອງພວກເຮົາຖືກຕ້ອງ ຫຼື ບໍ່, ຢ່າວ່າແຕ່ຄົນໜຶ່ງຄົນໃດໃນພວກເຮົາທີ່ຈະສົງໄສເຖິງຄວາມຖືກຕ້ອງໃນທຸກສິ່ງທີ່ພວກເຮົາຍຶດໝັ້ນເລີຍ. ແມ່ນໃຜທີ່ສາມາດຮູ້ຈັກຄວາມປະສົງຂອງພຣະເຈົ້າ? ແນ່ນອນ, ສຳລັບເສັ້ນທາງປະເພດໃດທີ່ມະນຸດຍ່າງຕາມ, ພວກເຮົາບໍ່ຮູ້ທີ່ຈະສະແຫວງຫາ ຫຼື ຄົ້ນຫາ; ແຮງໄກທີ່ພວກເຮົາຈະສົນໃຈສອບຖາມ. ຍ້ອນພວກເຮົາພຽງແຕ່ໃສ່ໃຈວ່າ ພວກເຮົາສາມາດຖືກຍົກຂຶ້ນເທິງຟ້າ ຫຼື ບໍ, ພວກເຮົາສາມາດຮັບການອວຍພອນ ຫຼື ບໍ, ມີບ່ອນຢູ່ສຳລັບພວກເຮົາໃນອານາຈັກສະຫວັນ ຫຼື ບໍ; ແລະ ພວກເຮົາຈະມີສ່ວນໄດ້ຮັບການແບ່ງປັນນໍ້າແຫ່ງຊີວິດ ແລະ ໝາກຂອງຕົ້ນໄມ້ແຫ່ງຊີວິດ ຫຼື ບໍ. ບໍ່ແມ່ນຍ້ອນຜົນປະໂຫຍດໃນການຮັບສິ່ງຕ່າງໆເຫຼົ່ານີ້ບໍ ທີ່ເຮັດໃຫ້ພວກເຮົາເຊື່ອໃນພຣະຜູ້ເປັນເຈົ້າ ແລະ ກາຍມາເປັນຜູ້ຕິດຕາມຂອງພຣະອົງ? ຄວາມບາບຂອງພວກເຮົາໄດ້ຮັບການອະໄພໂທດ, ພວກເຮົາໄດ້ສຳນຶກຜິດ, ພວກເຮົາໄດ້ດື່ມຈອກເຫຼົ້າທີ່ຂົມຂື່ນ ແລະ ພວກເຮົາໄດ້ນຳໄມ້ກາງແຂນມາແບກໄວ້ຢູ່ເທິງຫຼັງຂອງພວກເຮົາ. ຜູ້ໃດສາມາດເວົ້າໄດ້ວ່າພຣະຜູ້ເປັນເຈົ້າຈະບໍ່ຍອມຮັບລາຄາທີ່ພວກເຮົາໄດ້ຈ່າຍ? ແມ່ນໃຜສາມາດເວົ້າໄດ້ວ່າພວກເຮົາຍັງກຽມພ້ອມນໍ້າມັນບໍ່ພຽງພໍ? ພວກເຮົາບໍ່ປາຖະໜາທີ່ຈະເປັນຍິງບໍລິສຸດທີ່ໂງ່ຈ້າເຫຼົ່ານັ້ນ ຫຼື ເປັນໜຶ່ງໃນບັນດາຜູ້ຄົນທີ່ຖືກປະຖິ້ມ. ຍິ່ງໄປກວ່ານັ້ນ ພວກເຮົາອະທິຖານຢ່າງສະໝໍ່າສະເໝີ, ຂໍໃຫ້ພຣະຜູ້ເປັນເຈົ້າຮັກສາພວກເຮົາຈາກການຖືກພຣະຄຣິດທຽມຫຼອກລວງ, ຍ້ອນມີຄຳກ່າວໄວ້ໃນພຣະຄຳພີວ່າ: “ແລ້ວຖ້າມີມະນຸດຄົນໃດເວົ້າກັບເຈົ້າວ່າ ເບິ່ງແມະ, ພຣະຄຣິດຢູ່ນີ້ ຫຼື ຢູ່ນັ້ນ; ຈົ່ງຢ່າເຊື່ອ. ຍ້ອນຈະເກີດມີພຣະຄຣິດປອມ ແລະ ຜູ້ປະກາດພຣະທຳປອມ ແລະ ພວກເຂົາຈະສະແດງໝາຍສຳຄັນ ແລະ ການອັດສະຈັນຫຼາຍຢ່າງ; ເພື່ອວ່າຖ້າເປັນໄປໄດ້ ພວກເຂົາຈະຫຼອກລວງແມ່ນແຕ່ຄົນທີ່ຖືກເລືອກໄວ້ແລ້ວ” (ມັດທາຍ 24:23-24). ພວກເຮົາທຸກຄົນໄດ້ຈົດຈຳຂໍ້ພຣະຄຳພີເຫຼົ່ານີ້, ພວກເຮົາຮູ້ຈັກຂໍ້ພຣະຄຳພີເຫຼົ່ານີ້ດ້ວຍໃຈ ແລະ ພວກເຮົາເຫັນຂໍ້ພຣະຄຳພີເຫຼົ່ານີ້ເປັນຊັບສົມບັດທີ່ລໍ້າຄ່າ, ເປັນຊີວິດ ແລະ ເປັນໜັງສືແຫ່ງຄວາມເຊື່ອທີ່ຕັດສິນວ່າ ພວກເຮົາສາມາດໄດ້ຮັບຄວາມລອດພົ້ນ ຫຼື ການຍົກຂຶ້ນສູ່ສະຫວັນບໍ...

ເປັນເວລາຫຼາຍພັນປີ ຄົນທີ່ມີຊີວິດຢູ່ກໍຕາຍໄປ, ນຳຄວາມປາຖະໜາຂອງພວກເຂົາ ແລະ ຄວາມຝັນຂອງພວກເຂົາໄປນຳພວກເຂົາ, ແຕ່ໃນເລື່ອງທີ່ວ່າ ພວກເຂົາໄປອານາຈັກສະຫວັນ ຫຼື ບໍນັ້ນບໍ່ມີໃຜຮູ້ຢ່າງແທ້ຈິງ. ຄົນທີ່ຕາຍໄປກໍກັບມາ, ລືມເລື່ອງລາວທຸກຢ່າງທີ່ເຄີຍເກີດຂຶ້ນ ແລະ ພວກເຂົາກໍຍັງປະຕິບັດຕາມຄຳສັ່ງສອນ ແລະ ເສັ້ນທາງຂອງບັນພະບຸລຸດຄືເກົ່າ. ໃນທຳນອງນີ້ ເວລາຫຼາຍປີຜ່ານໄປ ແລະ ວັນເວລາກໍຜ່ານໄປ, ບໍ່ມີໃຜຮູ້ຈັກວ່າ ພຣະເຢຊູເຈົ້າຂອງພວກເຮົາ ເຊິ່ງເປັນພຣະເຈົ້າຂອງພວກເຮົາ ຍອມຮັບທຸກສິ່ງທີ່ພວກເຮົາເຮັດຢ່າງແທ້ຈິງ ຫຼື ບໍ. ທຸກສິ່ງທີ່ພວກເຮົາສາມາດເຮັດໄດ້ກໍຄືຕັ້ງຕາລໍຄອຍສິ່ງທີ່ຕາມມາ ແລະ ຄາດການກ່ຽວກັບທຸກສິ່ງທີ່ຈະເກີດຂຶ້ນ. ຢ່າງໃດກໍຕາມ ພຣະເຈົ້າໄດ້ຮັກສາຄວາມມິດງຽບຂອງພຣະອົງຕະຫຼອດເວລາ ໂດຍບໍ່ປາກົດຕໍ່ພວກເຮົາ ແລະ ບໍ່ກ່າວກັບພວກເຮົາຈັກເທື່ອ. ດ້ວຍເຫດນັ້ນ ການປະຕິບັດຕາມພຣະຄຳພີ ແລະ ອີງຕາມໝາຍສຳຄັນ, ພວກເຮົາຈຶ່ງເຕັມໃຈພິພາກສາກ່ຽວກັບຄວາມປະສົງ ແລະ ອຸປະນິໄສຂອງພຣະເຈົ້າ. ພວກເຮົາໄດ້ລຶ້ງເຄີຍກັບຄວາມມິດງຽບ

ຂອງພຣະເຈົ້າ; ພວກເຮົາໄດ້ລຶ້ງເຄີຍກັບການວັດແທກສິ່ງທີ່ຖືກ ແລະ ຜິດຂອງການປະພຶດຕົວຂອງພວກເຮົາໂດຍວິທີການຄິດຂອງພວກເຮົາເອງ; ພວກເຮົາລຶ້ງເຄີຍກັບການເພິ່ງພາຄວາມຮູ້, ແນວຄິດ ແລະ ຈັນຍາບັນທາງສິນທຳຂອງພວກເຮົາແທນສິ່ງທີ່ພຣະເຈົ້າຕ້ອງການຈາກພວກເຮົາ; ພວກເຮົາໄດ້ລຶ້ງເຄີຍກັບການຮັບພຣະຄຸນຂອງພຣະເຈົ້າ; ພວກເຮົາໄດ້ລຶ້ງເຄີຍກັບການໃຫ້ພຣະເຈົ້າຈັດຕຽມຄວາມຊ່ວຍເຫຼືອໃນເວລາທີ່ພວກເຮົາຕ້ອງການ; ພວກເຮົາໄດ້ລຶ້ງເຄີຍກັບການແບມືຂໍພຣະເຈົ້າສຳລັບທຸກໆສິ່ງ ແລະ ສັ່ງພຣະເຈົ້າໃຫ້ເຮັດນັ້ນເຮັດນີ້; ພວກເຮົາຍັງໄດ້ລຶ້ງເຄີຍກັບການປະຕິບັດຕາມກົດລະບຽບ ບໍ່ສົນໃຈວ່າ ພຣະວິນຍານບໍລິສຸດນຳພາພວກເຮົາແນວໃດ; ແລະ ຍິ່ງໄປກວ່ານັ້ນ ພວກເຮົາໄດ້ລຶ້ງເຄີຍກັບມື້ທີ່ພວກເຮົາເປັນເຈົ້ານາຍຂອງຕົນເອງ. ພວກເຮົາເຊື່ອໃນພຣະເຈົ້າອົງນີ້ ຜູ້ເຊິ່ງພວກເຮົາບໍ່ເຄີຍພົບຊ່ອງໜ້າ. ຄຳຖາມແບບວ່າ ອຸປະນິໄສຂອງພຣະອົງເປັນແບບໃດ, ພຣະອົງມີ ແລະ ເປັນ, ພາບຫຼັກຂອງພຣະອົງເປັນແນວໃດ, ພວກເຮົາຈະຮູ້ຈັກພຣະອົງ ຫຼື ບໍ່ ໃນເວລາທີ່ພຣະອົງມາ, ແລະ ອື່ນໆອີກ, ບໍ່ມີສິ່ງໃດໃນບັນດາສິ່ງເຫຼົ່ານີ້ທີ່ສຳຄັນ. ສິ່ງທີ່ສຳຄັນກໍຄືພຣະອົງຢູ່ໃນຫົວໃຈຂອງພວກເຮົາ ແລະ ພວກເຮົາທັງໝົດລໍຖ້າພຣະອົງ ແລະ ມັນພຽງພໍແລ້ວທີ່ພວກເຮົາສາມາດຈິນຕະນາການວ່າ ພຣະອົງເປັນແບບນີ້ ຫຼື ເປັນແບບນັ້ນ. ພວກເຮົາຍົກຍ້ອງຄວາມເຊື່ອຂອງພວກເຮົາ ແລະ ຖືສິ່ງທີ່ເປັນຝ່າຍວິນຍານວ່າເປັນສິ່ງທີ່ມີຄ່າ. ພວກເຮົາເບິ່ງທຸກສິ່ງເປັນຄືກັບຂີ້ ແລະ ຢຽບທຸກໆສິ່ງໃຫ້ຢູ່ໃຕ້ຕີນເຮົາ. ເພາະພວກເຮົາເປັນຜູ້ເຊື່ອໃນພຣະຜູ້ເປັນເຈົ້າທີ່ມີສະຫງ່າລາສີ, ບໍ່ວ່າການເດີນທາງຈະດົນ ຫຼື ລຳບາກພຽງໃດ, ບໍ່ວ່າຄວາມທຸກຍາກລຳບາກ ແລະ ຄວາມອັນຕະລາຍຫຍັງຈະເກີດຂຶ້ນກັບພວກເຮົາກໍຕາມ, ບໍ່ມີສິ່ງໃດທີ່ສາມາດຢຸດບາດກ້າວຂອງພວກເຮົາໄດ້ເມື່ອພວກເຮົາຕິດຕາມພຣະຜູ້ເປັນເຈົ້າ. "ມີສາຍນໍ້າແຫ່ງຊີວິດທີ່ບໍລິສຸດ, ໃສສະອາດເໝືອນດັ່ງແກ້ວຜະລຶກາໄຫລອອກມາຈາກພຣະບັນລັງຂອງພຣະເຈົ້າ ແລະ ຂອງພຣະເມສານ້ອຍ. ຢູ່ທັງສອງຝາກຂອງແມ່ນໍ້າ ໄດ້ມີຕົ້ນໄມ້ແຫ່ງຊີວິດ ເຊິ່ງເກີດໝາກຜົນສິບສອງປະເພດ ແລະ ອອກໝາກທຸກເດືອນ ແລະ ໃບຂອງຕົ້ນໄມ້ນັ້ນມີໄວ້ເພື່ອການປິ່ນປົວປະຊາຊາດ, ຈະບໍ່ມີຄຳສາບແຊ່ງອີກຕໍ່ໄປ ມີແຕ່ບັນລັງຂອງພຣະເຈົ້າ ແລະ ຂອງພຣະເມສານ້ອຍຢູ່ໃນທີ່ນັ້ນ. ຄົນຮັບໃຊ້ຂອງພຣະອົງຈະຮັບໃຊ້ພຣະອົງ, ພວກເຂົາຈະເຫັນໜ້າຂອງພຣະອົງ ແລະ ຊື່ຂອງພຣະອົງກໍຈະຢູ່ໃນໜ້າຜາກຂອງພວກເຂົາ. ໃນທີ່ນັ້ນຈະບໍ່ມີກາງຄືນ ແລະ ພວກເຂົາບໍ່ຕ້ອງການທຽນໄຂ ຫຼື ແສງສະຫວ່າງຈາກດວງຕາເວັນ ຍ້ອນພຣະຜູ້ເປັນເຈົ້າໄດ້ມອບແສງສະຫວ່າງໃຫ້ກັບພວກເຂົາ ແລະ ພວກເຂົາຈະປົກຄອງສືບໄປເປັນນິດ" (ພະນິມິດ 22:1-5). ທຸກຄັ້ງທີ່ພວກເຮົາຮ້ອງພຣະທຳເຫຼົ່ານີ້, ຫົວໃຈຂອງພວກເຮົາເຕັມໄປດ້ວຍຄວາມຊື່ນຊົມຍິນດີ ແລະ ຄວາມພໍໃຈ ແລະ ນໍ້າຕາກໍໄຫຼຈາກຕາຂອງພວກເຮົາ. ຂອບຄຸນພຣະຜູ້ເປັນເຈົ້າທີ່ເລືອກພວກເຮົາ, ຂອບຄຸນພຣະຜູ້ເປັນເຈົ້າສຳລັບພຣະຄຸນຂອງພຣະອົງ. ໃນຊີວິດນີ້ ພຣະອົງໄດ້ມອບໃຫ້ເຮົາເປັນຮ້ອຍເທົ່າ ແລະ ໄດ້ມອບຊີວິດອັນຕະລອດໄປເປັນນິດໃຫ້ແກ່ພວກເຮົາໃນໂລກທີ່ຈະມາເຖິງ. ຖ້າພຣະອົງຂໍໃຫ້ພວກເຮົາຕາຍໃນຕອນນີ້, ພວກເຮົາຈະປະຕິບັດຕາມໂດຍບໍ່ມີການຈົ່ມຕໍ່ວ່າແມ່ນແຕ່ໜ້ອຍດຽວ. ໂອ ພຣະຜູ້ເປັນເຈົ້າ! ຂໍໃຫ້ພຣະອົງກະລຸນາມາໄວໆເທີ້ນ! ຂໍໃຫ້ພຣະອົງພິຈາລະນາວ່າ ພວກເຮົາສະແຫວງຫາພຣະອົງດ້ວຍຄວາມໝົດຫວັງຫຼາຍພຽງໃດ ແລະ

ປະຖິ້ມທຸກໆຢ່າງເພື່ອພຣະອົງ, ຂໍໃຫ້ພຣະອົງບໍ່ຊັກຊ້າແມ່ນແຕ່ນາທີດຽວ ຫຼື ວິນາທີດຽວອີກຕໍ່ໄປ.

ພຣະເຈົ້າມິດງຽບ ແລະ ບໍ່ເຄີຍປາກົດຕໍ່ພວກເຮົາຈັກເທື່ອ, ແຕ່ພາລະກິດຂອງພຣະອົງບໍ່ເຄີຍຢຸດ. ພຣະອົງສຳຫຼວດແຜ່ນດິນໂລກທັງໝົດ, ສັ່ງທຸກສິ່ງ, ເບິ່ງຄຳເວົ້າທຸກຄຳ ແລະ ການກະທຳທຸກຢ່າງຂອງມະນຸດ. ພຣະອົງດຳເນີນການຄຸ້ມຄອງຂອງພຣະອົງດ້ວຍຂັ້ນຕອນທີ່ມີໄຕ່ຕອງ ແລະ ສອດຄ່ອງກັບແຜນການຂອງພຣະອົງຢ່າງງຽບໆ ແລະ ບໍ່ມີຜົນສະທ້ອນທີ່ເກີນຄວາມເປັນຈິງ, ແຕ່ບາດກ້າວຂອງພຣະອົງກ້າວໄປຂ້າງໜ້າເທື່ອລະກ້າວ, ເຂົ້າໃກ້ມະນຸດຊາດຫຼາຍຂຶ້ນ ແລະ ອຳນາດແຫ່ງການພິພາກສາຂອງພຣະອົງກໍແຜ່ຂະຫຍາຍໄປທົ່ວຈັກກະວານດ້ວຍຄວາມໄວຂອງສາຍຟ້າແມບ ຕິດຕາມດ້ວຍບັນລັງຂອງພຣະອົງລົງມາສູ່ທ່າມກາງພວກເຮົາຢ່າງກະທັນຫັນ. ຊ່າງເປັນພາບທີ່ສະຫງ່າງາມແທ້ໆ ຊ່າງເປັນສາກທີ່ມີຄວາມສະຫງ່າຜ່າເຜີຍແທ້ໆ! ພຣະວິນຍານມາທ່າມກາງພວກເຮົາຄືກັບນົກເຂົາ ແລະ ຄືກັບສິງໂຕແຜດສຽງດັງກຶກກ້ອງ. ພຣະອົງຄືສະຕິປັນຍາ, ພຣະອົງຄືຄວາມຊອບທຳ, ຄວາມສະຫງ່າງາມ ແລະ ພຣະອົງມາທ່າມກາງພວກເຮົາຢ່າງລັບໆ ໂດຍຖືສິດອຳນາດ ແລະ ເຕັມໄປດ້ວຍຄວາມຮັກ ແລະ ຄວາມເມດຕາ. ບໍ່ມີໃຜທີ່ຮູ້ຕົວໃນການມາເຖິງຂອງພຣະອົງ, ບໍ່ມີໃຜຕ້ອນຮັບການມາເຖິງຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ບໍ່ມີໃຜຮູ້ກ່ຽວກັບທຸກສິ່ງທີ່ພຣະອົງຈະກະທຳ. ຊີວິດຂອງມະນຸດກໍດຳເນີນຕໍ່ໄປຄືກັບແຕ່ກ່ອນ, ຫົວໃຈຂອງເຂົາບໍ່ປ່ຽນແປງ ແລະ ມື້ກໍຜ່ານໄປຕາມປົກກະຕິ. ພຣະເຈົ້າມີຊີວິດຢູ່ທ່າມກາງພວກເຮົາ, ເປັນມະນຸດຄືກັບມະນຸດຄົນອື່ນໆ, ຄືກັບຜູ້ຕິດຕາມທົ່ວໄປທີ່ບໍ່ມີຄວາມສຳຄັນຫຍັງໝົດ ແລະ ເປັນຜູ້ເຊື່ອທີ່ທຳມະດາ. ພຣະອົງມີການສະແຫວງຫາຂອງພຣະອົງເອງ, ເປົ້າໝາຍຂອງພຣະອົງເອງ; ແລະ ຍິ່ງໄປກວ່ານັ້ນ ພຣະອົງມີຄວາມເປັນພຣະເຈົ້າທີ່ມະນຸດທຳມະດາບໍ່ມີ. ບໍ່ມີໃຜສັງເກດເຫັນການເປັນຢູ່ຂອງຄວາມເປັນພຣະເຈົ້າຂອງພຣະອົງ ແລະ ບໍ່ມີຜູ້ໃດຮັບຮູ້ເຖິງຄວາມແຕກຕ່າງລະຫວ່າງແກ່ນແທ້ຂອງພຣະອົງ ແລະ ແກ່ນແທ້ຂອງມະນຸດ. ພວກເຮົາມີຊີວິດຢູ່ຮ່ວມກັບພຣະອົງ, ບໍ່ໄດ້ຖືກບີບບັງຄັບ ແລະ ຢ້ານກົວ, ຍ້ອນໃນສາຍຕາຂອງພວກເຮົາ ພຣະອົງເປັນຜູ້ເຊື່ອທີ່ບໍ່ມີຄວາມໝາຍຫຍັງ. ພຣະອົງເບິ່ງທຸກໆການເຄື່ອນໄຫວຂອງພວກເຮົາ, ເບິ່ງຄວາມຄິດ ແລະ ແນວຄວາມຄິດທັງໝົດຂອງພວກເຮົາທີ່ເປີດເຜີຍຕໍ່ໜ້າພຣະອົງ. ບໍ່ມີໃຜສົນໃຈໃນການເປັນຢູ່ຂອງພຣະອົງ, ບໍ່ມີໃຜຈິນຕະນາການຫຍັງກ່ຽວກັບໜ້າທີ່ຂອງພຣະອົງ ແລະ ຍິ່ງໄປກວ່ານັ້ນ ບໍ່ມີໃຜສົງໄສກ່ຽວກັບຕົວຕົນຂອງພຣະອົງແມ່ນແຕ່ໜ້ອຍດຽວ. ທຸກສິ່ງທີ່ພວກເຮົາເຮັດກໍຄືສືບຕໍ່ໃນການສະແຫວງຫາຂອງພວກເຮົາ, ຄືກັບວ່າພຣະອົງບໍ່ມີຫຍັງກ່ຽວຂ້ອງກັບພວກເຮົາເລີຍ...

ພຣະວິນຍານບໍລິສຸດສຳແດງຂໍ້ພຣະທຳ "ຜ່ານ" ພຣະອົງໂດຍບັງເອີນ ແລະ ເຖິງແມ່ນຮູ້ສຶກວ່າມັນເປັນເລື່ອງທີ່ບໍ່ຄາດຝັນ ແຕ່ເຖິງຢ່າງໃດກໍຕາມ ພວກເຮົາກໍຮັບຮູ້ວ່າມັນເປັນຖ້ອຍຄຳທີ່ມາຈາກພຣະເຈົ້າ ແລະ ພ້ອມທີ່ຈະຮັບມັນຈາກພຣະເຈົ້າ. ນັ້ນກໍຍ້ອນວ່າ ບໍ່ວ່າແມ່ນໃຜກໍຕາມທີ່ສະແດງພຣະທຳເຫຼົ່ານີ້ ຖ້າແມ່ນວ່າພຣະທຳເຫຼົ່ານີ້ມາຈາກພຣະວິນຍານບໍລິສຸດ ພວກເຮົາຄວນຍອມຮັບ ແລະ ບໍ່ປະຕິເສດພຣະທຳດັ່ງກ່າວ. ຖ້ອຍຄຳຕໍ່ໄປອາດມາຜ່ານເຮົາກໍໄດ້ ຫຼື ຜ່ານເຈົ້າ ຫຼື ຜ່ານຄົນອື່ນອີກ. ບໍ່ວ່າຈະເປັນໃຜກໍຕາມ ທຸກຢ່າງແມ່ນພຣະຄຸນຂອງພຣະເຈົ້າ. ແຕ່ບໍ່ວ່າຈະເປັນໃຜກໍຕາມ ພວກເຮົາຈະບໍ່

ນະມັດສະການບຸກຄົນນີ້, ບໍ່ວ່າຫຍັງກໍຕາມ ບຸກຄົນນີ້ບໍ່ສາມາດເປັນພຣະເຈົ້າຂອງພວກເຮົາໄດ້ຢ່າງແນ່ນອນ ຫຼື ພວກເຮົາຈະບໍ່ເລືອກບຸກຄົນທຳມະດານີ້ເປັນພຣະເຈົ້າຂອງພວກເຮົາ ບໍ່ວ່າດ້ວຍວິທີໃດກໍຕາມ. ພຣະເຈົ້າຂອງພວກເຮົາຍິ່ງໃຫຍ່ ແລະ ສູງສົ່ງ; ບຸກຄົນທີ່ບໍ່ສຳຄັນດັ່ງກ່າວຈະສາມາດຢືນຢູ່ໃນແທນທີ່ຂອງພຣະອົງໄດ້ແນວໃດ? ຍິ່ງໄປກວ່ານັ້ນ ພວກເຮົາກຳລັງລໍຖ້າໃຫ້ພຣະເຈົ້າມາ ແລະ ນຳພວກເຮົາກັບໄປສູ່ອານາຈັກສະຫວັນ, ສະນັ້ນຄົນທີ່ບໍ່ສຳຄັນນີ້ຈະສາມາດປະຕິບັດພາລະກິດທີ່ສຳຄັນ ແລະ ລຳບາກເຊັ່ນນີ້ໄດ້ແນວໃດ? ຖ້າພຣະຜູ້ເປັນເຈົ້າມາອີກຄັ້ງ, ມັນຕ້ອງເກີດຂຶ້ນເທິງເມກສີຂາວເພື່ອວ່າຝູງຊົນທັງໝົດອາດເຫັນໄດ້. ຊ່າງເປັນພາບທີ່ຈະເກີດຂຶ້ນຢ່າງສະຫງ່າງາມແທ້ເດ! ແລ້ວເປັນໄປໄດ້ແນວໃດທີ່ພຣະອົງສາມາດລີ້ຢູ່ທ່າມກາງຄົນທຳມະດາສາມັນຢ່າງລັບໆໄດ້?

ແຕ່ແມ່ນບຸກຄົນທຳມະດານີ້ແຫຼະ ທີ່ລີ້ຢູ່ທ່າມກາງປະຊາຊົນ ແລະ ເປັນຜູ້ທີ່ປະຕິບັດພາລະກິດໃໝ່ໃນການຊ່ວຍເຫຼືອພວກເຮົາ. ພຣະອົງບໍ່ໄດ້ອະທິບາຍ ຫຼື ບອກໃຫ້ພວກເຮົາຮູ້ວ່າ ເປັນຫຍັງພຣະອົງຈຶ່ງມາ, ມີພຽງແຕ່ປະຕິບັດພາລະກິດທີ່ພຣະອົງມຸ່ງໝາຍຈະປະຕິບັດດ້ວຍຂັ້ນຕອນວັດແທກ ແລະສອດຄ່ອງຕາມແຜນການຂອງພຣະອົງ. ພຣະທຳ ແລະ ຖ້ອຍຄຳຂອງພຣະອົງກາຍມາເປັນສິ່ງທີ່ເກີດຂຶ້ນເລື້ອຍໆ. ຈາກການປອບໃຈ, ແນະນຳ, ບອກ ແລະ ຕັກເຕືອນ, ຈົນເຖິງການຕຳນິຕິເຕືອນ ແລະ ຕີສອນໃຫ້ມີວິໄນ; ຈາກນ້ຳສຽງທີ່ອ່ອນໂຍນ ແລະ ອ່ອນຫວານ ຈົນເຖິງຄຳເວົ້າທີ່ຮຸນແຮງ ແລະ ສະຫງ່າງາມ, ທຸກຢ່າງໄດ້ມອບຄວາມເມດຕາໃຫ້ກັບມະນຸດ ແລະ ປູກຝັງຄວາມຢ້ານກົວໃນຕົວເຂົາ. ທຸກສິ່ງທີ່ພຣະອົງກ່າວແທງທະລຸຄວາມລັບທີ່ເຊື່ອງເລິກຢູ່ພາຍໃນຕົວພວກເຮົາ; ພຣະທຳຂອງພຣະອົງປັກລົງທີ່ຫົວໃຈຂອງພວກເຮົາ, ປັກລົງທີ່ຈິດວິນຍານຂອງພວກເຮົາ ແລະ ປ່ອຍໃຫ້ພວກເຮົາເຕັມໄປດ້ວຍຄວາມອັບອາຍທີ່ບໍ່ສາມາດທົນໄດ້ ໂດຍບໍ່ຄ່ອຍຈະຮູ້ວ່າ ຈະເຊື່ອງຕົນເອງໄດ້ຢູ່ໃສ. ພວກເຮົາເລີ່ມສົງໄສວ່າພຣະເຈົ້າທີ່ຢູ່ໃນຫົວໃຈຂອງບຸກຄົນນີ້ຮັກພວກເຮົາຢ່າງແທ້ຈິງ ຫຼື ບໍ່ ແລະ ພຣະອົງຕ້ອງການຫຍັງແທ້. ບາງເທື່ອ ພວກເຮົາສາມາດໄດ້ຮັບການຍົກຂຶ້ນສູ່ສະຫວັນຫຼັງຈາກທີ່ອົດທົນຕໍ່ການທົນທຸກເຫຼົ່ານີ້? ໃນຫົວຂອງພວກເຮົາ ພວກເຮົາກຳລັງຄຳນວນ... ກ່ຽວກັບຈຸດໝາຍປາຍທາງທີ່ຈະມາເຖິງ ແລະ ກ່ຽວກັບຊະຕາກຳໃນອະນາຄົດຂອງພວກເຮົາ. ແຕ່ເໝືອນດັ່ງທີ່ຜ່ານມາ ບໍ່ມີຜູ້ໃດໃນບັນດາພວກເຮົາທີ່ເຊື່ອວ່າພຣະເຈົ້າໄດ້ສະຖິດໃນເນື້ອໜັງເພື່ອປະຕິບັດພາລະກິດທ່າມກາງພວກເຮົາແລ້ວ. ເຖິງແມ່ນພຣະອົງໄດ້ຕິດຕາມພວກເຮົາເປັນເວລາດົນນານມາແລ້ວ, ເຖິງແມ່ນພຣະອົງໄດ້ກ່າວພຣະທຳຫຼາຍຂໍ້ຢູ່ຊ່ອງໜ້າພວກເຮົາແລ້ວ, ພວກເຮົາກໍຍັງບໍ່ເຕັມໃຈຍອມຮັບມະນຸດທຳມະດາດັ່ງກ່າວນີ້ເປັນພຣະເຈົ້າແຫ່ງອະນາຄົດຂອງພວກເຮົາ ແລ້ວແຮງໄກທີ່ພວກເຮົາຈະເຕັມໃຈຝາກຝັງອະນາຄົດຂອງພວກເຮົາ ແລະ ຊະຕາກຳຂອງພວກເຮົາໄວ້ກັບບຸກຄົນທີ່ບໍ່ສຳຄັນນີ້ຄວບຄຸມ. ດ້ວຍພຣະອົງ ພວກເຮົາຈຶ່ງໄດ້ຮັບແຫຼ່ງນ້ຳແຫ່ງຊີວິດທີ່ບໍ່ຮູ້ຈັກໝົດ ແລະ ຜ່ານພຣະອົງ ພວກເຮົາຈຶ່ງມີຊີວິດຢູ່ຊ່ອງໜ້າພຣະເຈົ້າ. ແຕ່ພວກເຮົາພຽງແຕ່ຮູ້ສຶກຂອບຄຸນກັບພຣະຄຸນຂອງພຣະເຢຊູເຈົ້າໃນສະຫວັນ ແລະ ບໍ່ເຄີຍສົນໃຈກັບຄວາມຮູ້ສຶກຂອງບຸກຄົນທີ່ທຳມະດາຄົນນີ້ ຜູ້ເຊິ່ງມີຄວາມເປັນພຣະເຈົ້າ. ເໝືອນດັ່ງທີ່ຜ່ານມາ ພຣະອົງປະຕິບັດພາລະກິດຂອງພຣະອົງໂດຍລີ້ລັບໃນເນື້ອໜັງຢ່າງຖ່ອມຕົວ, ສຳແດງໃຫ້ເຫັນເຖິງ

ຫົວໃຈສ່ວນເລິກຂອງພຣະອົງ, ຄືກັບວ່າບໍ່ມີຄວາມຮູ້ສຶກທີ່ມະນຸດຊາດປະຕິເສດພຣະອົງເລີຍ, ຄືກັບວ່າພຣະອົງໃຫ້ອະໄພຄວາມເປັນເດັກນ້ອຍ ແລະ ຄວາມເມີນເສີຍຂອງມະນຸດຕະຫຼອດໄປ ແລະ ອົດທົນຕໍ່ທ່າທາງບໍ່ເຄົາລົບຂອງມະນຸດທີ່ມີຕໍ່ພຣະອົງຕະຫຼອດໄປ.

ພວກເຮົາບໍ່ຮູ້ຈັກເລີຍວ່າ ມະນຸດທີ່ບໍ່ສຳຄັນຄົນນີ້ໄດ້ນຳພາພວກເຮົາໜຶ່ງກ້າວເຂົ້າສູ່ອົງພາລະກິດໜຶ່ງຂອງພຣະເຈົ້າ. ພວກເຮົາໄດ້ຜ່ານການທົດລອງຫຼາຍຄັ້ງ, ແບກຮັບການຕີສອນຈົນນັບບໍ່ຖ້ວນ ແລະ ຖືກທົດສອບດ້ວຍຄວາມຕາຍ. ພວກເຮົາຮຽນຮູ້ເຖິງອຸປະນິໄສທີ່ຊອບທຳ ແລະ ສະຫງ່າງາມຂອງພຣະເຈົ້າ, ແລ້ວຍັງໄດ້ຮັບຄວາມຮັກ, ຄວາມເມດຕາຂອງພຣະອົງ, ໄດ້ຊື່ນຊົມລິດອຳນາດ ແລະ ສະຕິປັນຍາທີ່ຍິ່ງໃຫຍ່ຂອງພຣະເຈົ້າ, ໄດ້ເປັນພະຍານຕໍ່ຄວາມເປັນຕາຮັກຂອງພຣະເຈົ້າ ແລະ ເບິ່ງຄວາມກະຕືລືລົ້ນຂອງພຣະອົງທີ່ປາຖະໜາຊ່ວຍມະນຸດໃຫ້ລອດພົ້ນ. ໃນພຣະທຳຂອງບຸກຄົນທຳມະດາຄົນນີ້ ພວກເຮົາມາຮູ້ຈັກອຸປະນິໄສ ແລະ ແກ່ນແທ້ຂອງພຣະເຈົ້າ, ເຂົ້າໃຈຄວາມປະສົງຂອງພຣະເຈົ້າ, ຮູ້ຈັກເຖິງທຳມະຊາດ ແລະ ແກ່ນແທ້ຂອງມະນຸດ ແລະ ເຫັນຫົນທາງສູ່ຄວາມລອດພົ້ນ ແລະ ຄວາມສົມບູນ. ພຣະທຳຂອງພຣະອົງເຮັດໃຫ້ພວກເຮົາ “ຕາຍ” ແລະ ພວກມັນເຮັດໃຫ້ພວກເຮົາ “ເກີດໃໝ່”; ພຣະທຳຂອງພຣະອົງນຳຄວາມສຸກສະບາຍມາໃຫ້ພວກເຮົາ, ແຕ່ກໍຍັງປ່ອຍໃຫ້ພວກເຮົາຖືກທໍລະມານຢູ່ກັບຄວາມຮູ້ສຶກຜິດ ແລະ ຄວາມຮູ້ສຶກເປັນໜີ້ບຸນຄຸນ; ພຣະທຳຂອງພຣະອົງນຳຄວາມຍິນດີ ແລະ ສັນຕິສຸກມາສູ່ພວກເຮົາ ແຕ່ຍັງນຳຄວາມເຈັບປວດທີ່ບໍ່ມີບ່ອນສິ້ນສຸດມາເຊັ່ນກັນ. ບາງຄັ້ງ ພວກເຮົາເປັນຄືກັບລູກແກະທີ່ຈະຖືກຂ້າດ້ວຍກຳມືຂອງພຣະອົງ; ບາງຄັ້ງ ພວກເຮົາເປັນຄືກັບແກ້ວຕາດວງໃຈຂອງພຣະອົງ ແລະ ຮັບຄວາມຮັກທີ່ອ່ອນຫວານຂອງພຣະອົງ; ບາງຄັ້ງ ພວກເຮົາເປັນຄືກັບສັດຕູຂອງພຣະອົງ ແລະ ພາຍໃຕ້ສາຍຕາຂອງພຣະອົງ ພວກເຮົາຖືກເຮັດໃຫ້ກາຍເປັນຂີ້ເທົ່າດ້ວຍຄວາມໂກດຮ້າຍຂອງພຣະອົງ. ພວກເຮົາເປັນມະນຸດຊາດທີ່ພຣະອົງຊ່ວຍໃຫ້ລອດພົ້ນ, ພວກເຮົາເປັນໜອນທີ່ຢູ່ໃນຕາຂອງພຣະອົງ ແລະ ພວກເຮົາເປັນແກະທີ່ຫຼົງທາງທີ່ພຣະອົງມຸ່ງໝັ້ນຊອກຫາທັງກາງເວັນ ແລະ ກາງຄືນ. ພຣະອົງເມດຕາຕໍ່ພວກເຮົາ, ພຣະອົງກຽດຊັງພວກເຮົາ, ພຣະອົງຍົກພວກເຮົາຂຶ້ນ, ພຣະອົງປອບໂຍນ ແລະ ແນະນຳພວກເຮົາ, ພຣະອົງນຳພາພວກເຮົາ, ພຣະອົງສ່ອງແສງສະຫວ່າງໃຫ້ກັບພວກເຮົາ, ພຣະອົງຕີສອນ ແລະ ຝຶກວິໄນພວກເຮົາ ແລະ ພຣະອົງຍັງສາບແຊ່ງພວກເຮົາອີກ. ພຣະອົງບໍ່ເຄີຍຢຸດເປັນຫ່ວງກັງວົນກ່ຽວກັບພວກເຮົາບໍ່ວ່າກາງເວັນ ແລະ ກາງຄືນ ແລະ ປົກປ້ອງ ດູແລພວກເຮົາທັງກາງເວັນ ແລະ ກາງຄືນ, ບໍ່ເຄີຍໜີຫ່າງຈາກຂ້າງພວກເຮົາຈັກເທື່ອ, ພຣະອົງສະຫຼະເລືອດໃນຫົວໃຈຂອງພຣະອົງເພື່ອເຫັນແກ່ພວກເຮົາ ແລະ ຈ່າຍທຸກລາຄາໃຫ້ກັບພວກເຮົາ. ຈາກຖ້ອຍຄຳຂອງຮ່າງກາຍມະນຸດທີ່ນ້ອຍ ແລະ ທຳມະດານີ້, ພວກເຮົາໄດ້ຊື່ນຊົມຄວາມສົມບູນຂອງພຣະເຈົ້າ ແລະ ເຫັນຈຸດໝາຍປາຍທາງທີ່ພຣະເຈົ້າປະທານໃຫ້ກັບພວກເຮົາ. ເຖິງຈະເປັນແບບນີ້ກໍຕາມ ຄວາມທະນົງຕົວກໍຍັງສ້າງບັນຫາໃນຫົວໃຈຂອງພວກເຮົາ ແລະ ພວກເຮົາຍັງບໍ່ເຕັມໃຈຢ່າງຫ້າວຫັນທີ່ຈະຍອມຮັບບຸກຄົນເຊັ່ນນີ້ໃຫ້ເປັນພຣະເຈົ້າຂອງພວກເຮົາໄດ້. ເຖິງແມ່ນພຣະອົງໄດ້ມອບອາຫານມານາໃຫ້ກັບພວກເຮົາຢ່າງຫຼວງຫຼາຍ, ຫຼາຍເກີນທີ່ຈະຊື່ນຊົມ, ຈົນບໍ່ມີຫຍັງສາມາດແທນທີ່ພຣະຜູ້ເປັນເຈົ້າໃນຫົວໃຈຂອງພວກເຮົາໄດ້. ແຕ່

ພວກເຮົາກໍຍັງລັງເລໃຈທີ່ຈະໃຫ້ກຽດຄວາມເປັນຕົວຕົນ ແລະ ສະຖານະທີ່ເປັນພິເສດຂອງບຸກຄົນນີ້. ຖ້າພຣະອົງບໍ່ເປີດປາກຂອງພຣະອົງເພື່ອຂໍຮ້ອງໃຫ້ພວກເຮົາຍອມຮັບວ່າ ພຣະອົງເປັນພຣະເຈົ້າ, ພວກເຮົາກໍຈະບໍ່ມີທາງຍອມຮັບພຣະອົງດ້ວຍຕົວເອງວ່າເປັນພຣະເຈົ້າ ຜູ້ທີ່ຈະມາເຖິງໃນໄວໆນີ້ ແລະ ຜູ້ທີ່ໄດ້ປະຕິບັດພາລະກິດທ່າມກາງພວກເຮົາເປັນເວລາດົນນານມາແລ້ວ.

ພຣະເຈົ້າສືບຕໍ່ກັບຖ້ອຍຄຳຂອງພຣະອົງ, ນຳໃຊ້ຫຼາກຫຼາຍວິທີ ແລະ ທັດສະນະເພື່ອຕັກເຕືອນກ່ຽວກັບສິ່ງທີ່ພວກເຮົາຄວນເຮັດ, ໃນຂະນະດຽວກັນກໍ່ມອບສຽງໃຫ້ແກ່ຫົວໃຈຂອງພຣະອົງ. ພຣະທຳຂອງພຣະອົງແບກພະລັງແຫ່ງຊີວິດ, ຊີ້ນຳຫົນທາງທີ່ພວກເຮົາຄວນຍ່າງ ແລະ ເຮັດໃຫ້ພວກເຮົາເຂົ້າໃຈວ່າ ຄວາມຈິງແມ່ນຫຍັງ. ພວກເຮົາເລີ່ມຮັບການຊັກຈູງໂດຍພຣະທຳຂອງພຣະອົງ, ພວກເຮົາເລີ່ມຕົ້ນໃສ່ໃຈກັບນໍ້າສຽງ ແລະ ທ່າທາງໃນການເວົ້າຂອງພຣະອົງ ແລະ ໂດຍຈິດໃຕ້ສຳນຶກ ພວກເຮົາເລີ່ມສົນໃຈໃນຄວາມຮູ້ສຶກສ່ວນເລິກສຸດຂອງບຸກຄົນທີ່ບໍ່ໂດດເດັ່ນຄົນນີ້. ພຣະອົງຫຼັ່ງເລືອດຈາກຫົວໃຈຂອງພຣະອົງເພື່ອປະຕິບັດພາລະກິດແທນພວກເຮົາ, ເສຍການນອນ ແລະ ຄວາມຫິວແທນພວກເຮົາ, ຮ້ອງໄຫ້ເພື່ອພວກເຮົາ, ຖອນໃຈເພື່ອພວກເຮົາ, ຄາງຍ້ອນຄວາມເຈັບປ່ວຍແທນພວກເຮົາ, ທົນຮັບຄວາມອັບອາຍຂາຍໜ້າເພື່ອຜົນປະໂຫຍດແຫ່ງຈຸດໝາຍປາຍທາງ ແລະ ຄວາມລອດພົ້ນຂອງພວກເຮົາ; ແລະ ຄວາມດື້ດ້ານ ແລະ ຄວາມກະບົດຂອງພວກເຮົາທີ່ດຶງນໍ້າຕາ ແລະ ເລືອດຈາກຫົວໃຈຂອງພຣະອົງ. ບໍ່ມີມະນຸດທຳມະດາຄົນໃດທີ່ມີວິທີທາງຄວາມເປັນຢູ່ ແລະ ມີແບບນີ້ ຫຼື ບໍ່ມີມະນຸດທີ່ເສື່ອມຊາມຄົນໃດສາມາດມີ ຫຼື ບັນລຸສິ່ງນີ້ໄດ້. ພຣະອົງສຳແດງຄວາມອົດທົນ ແລະ ຄວາມອົດກັ້ນທີ່ບໍ່ມີມະນຸດທຳມະດາຄົນໃດເຮັດໄດ້ ແລະ ຄວາມຮັກຂອງພຣະອົງກໍບໍ່ແມ່ນສິ່ງທີ່ມະນຸດຄົນໃດໃຫ້ໄດ້. ບໍ່ມີໃຜນອກຈາກພຣະອົງທີ່ສາມາດຮູ້ທຸກຄວາມຄິດຂອງພວກເຮົາ ຫຼື ມີຄວາມເຂົ້າໃຈທີ່ຊັດເຈນ ແລະ ສົມບູນກ່ຽວກັບທຳມະຊາດ ແລະ ແກ່ນແທ້ຂອງພວກເຮົາ ຫຼື ພິພາກສາຄວາມກະບົດ ແລະ ຄວາມເສື່ອມຊາມຂອງມະນຸດຊາດ ຫຼື ເວົ້າກັບພວກເຮົາ ແລະ ປະຕິບັດພາລະກິດໃນພວກເຮົາແບບນີ້ແທນພຣະເຈົ້າທີ່ຢູ່ໃນສະຫວັນໄດ້. ບໍ່ມີໃຜນອກຈາກພຣະອົງທີ່ມີສິດອຳນາດ, ສະຕິປັນຍາ ແລະ ສັກສີຂອງພຣະເຈົ້າ; ອຸປະນິໄສຂອງພຣະເຈົ້າ ແລະ ສິ່ງທີ່ພຣະເຈົ້າມີ ແລະ ເປັນທັງໝົດແມ່ນເກີດມາຈາກພຣະເຈົ້າ. ບໍ່ມີໃຜນອກຈາກພຣະອົງທີ່ສາມາດສຳແດງໃຫ້ພວກເຮົາເຫັນເຖິງຫົນທາງ ແລະ ນຳແສງສະຫວ່າງມາສູ່ພວກເຮົາ. ບໍ່ມີຜູ້ໃດນອກຈາກພຣະອົງທີ່ສາມາດເປີດເຜີຍສິ່ງລຶກລັບທີ່ພຣະເຈົ້າບໍ່ໄດ້ເປີດເຜີຍນັບຕັ້ງແຕ່ການເນລະມິດສ້າງຈົນເຖິງປັດຈຸບັນ. ບໍ່ມີໃຜນອກຈາກພຣະອົງທີ່ສາມາດຊ່ວຍພວກເຮົາພົ້ນຈາກການເປັນທາດຂອງຊາຕານ ແລະ ອຸປະນິໄສທີ່ເສື່ອມຊາມຂອງພວກເຮົາເອງ. ພຣະອົງເປັນຕົວແທນຂອງພຣະເຈົ້າ. ພຣະອົງສຳແດງໃຫ້ເຫັນເຖິງຫົວໃຈໃນສ່ວນເລິກສຸດຂອງພຣະເຈົ້າ, ການຕັກເຕືອນຂອງພຣະເຈົ້າ ແລະ ພຣະທຳແຫ່ງການພິພາກສາຂອງພຣະເຈົ້າທີ່ມີຕໍ່ມະນຸດຊາດທັງໝົດ. ພຣະອົງໄດ້ເລີ່ມຕົ້ນຍຸກໃໝ່, ສະໄໝໃໝ່ ແລະ ນຳພາໄປສູ່ສະຫວັນ ແລະ ແຜ່ນດິນໂລກໃໝ່ ແລະ ພາລະກິດໃໝ່; ແລະ ພຣະອົງນຳຄວາມຫວັງມາສູ່ພວກເຮົາ, ສິ້ນສຸດຊີວິດທີ່ພວກເຮົາດຳເນີນຢູ່ໃນຄວາມມືດມົວ ແລະ ເຮັດໃຫ້ການເປັນຢູ່ຂອງພວກເຮົາທັງໝົດເຫັນເຖິງເສັ້ນທາງສູ່ຄວາມລອດ

ພົ້ນຢ່າງຊັດເຈນທີ່ສຸດ. ພຣະອົງໄດ້ເອົາຊະນະການເປັນຢູ່ທັງໝົດຂອງພວກເຮົາ ແລະ ໄດ້ຮັບຫົວໃຈຂອງພວກເຮົາ. ຈາກຊ່ວງເວລານັ້ນເປັນຕົ້ນໄປ, ຈິດໃຈຂອງພວກເຮົາເລີ່ມມີສະຕິ ແລະ ຈິດວິນຍານຂອງພວກເຮົາເລີ່ມຟື້ນຟູຂຶ້ນ: ບຸກຄົນທີ່ທຳມະດາ ແລະ ບໍ່ສຳຄັນຄົນນີ້ ຜູ້ເຊິ່ງມີຊີວິດຢູ່ທ່າມກາງພວກເຮົາ ແລະ ຖືກພວກເຮົາປະຕິເສດ, ບຸກຄົນນີ້ບໍ່ແມ່ນພຣະເຢຊູເຈົ້າບໍ ຜູ້ທີ່ຢູ່ໃນຄວາມຄິດ ໃນເວລາຕື່ນນອນ ຫຼື ໃນຄວາມຝັນຂອງພວກເຮົາສະເໝີມາ ແລະ ເປັນຜູ້ທີ່ພວກເຮົາປາຖະໜາທັງກາງເວັນ ແລະ ກາງຄືນ? ນັ້ນຄືພຣະອົງ! ຄືພຣະອົງແທ້ໆ! ພຣະອົງເປັນພຣະເຈົ້າຂອງພວກເຮົາ! ພຣະອົງເປັນຄວາມຈິງ, ເປັນຫົນທາງ ແລະ ເປັນຊີວິດ! ພຣະອົງເຮັດໃຫ້ພວກເຮົາສາມາດມີຊີວິດຢູ່ໄດ້ອີກຄັ້ງ ແລະ ໄດ້ເຫັນແສງສະຫວ່າງ ແລະ ຢຸດຫົວໃຈຂອງພວກເຮົາຈາກການຫຼົງທາງ. ພວກເຮົາໄດ້ກັບມາສູ່ເຮືອນຂອງພຣະເຈົ້າ, ພວກເຮົາໄດ້ກັບມາຢູ່ຕໍ່ໜ້າບັນລັງຂອງພຣະອົງ, ພວກເຮົາໄດ້ຢູ່ຊ້ອງໜ້າພຣະອົງ, ພວກເຮົາໄດ້ປະຈັກໃບໜ້າຂອງພຣະອົງ ແລະ ພວກເຮົາໄດ້ເຫັນຫົນທາງທີ່ຢູ່ເບື້ອງໜ້າ. ໃນເວລານີ້ພຣະອົງໄດ້ເອົາຊະນະຫົວໃຈຂອງພວກເຮົາຢ່າງສົມບູນແລ້ວ; ພວກເຮົາບໍ່ສົງໄສອີກຕໍ່ໄປວ່າ ພຣະອົງແມ່ນຫຍັງ, ບໍ່ຕໍ່ຕ້ານພາລະກິດຂອງພຣະອົງ ແລະ ພຣະທຳຂອງພຣະອົງອີກຕໍ່ໄປ ແລະ ພວກເຮົາກົ້ມລົງຂາບຕໍ່ໜ້າພຣະອົງ. ພວກເຮົາບໍ່ປາຖະໜາໄປຫຼາຍກວ່າການຕິດຕາມຮອຍບາດກ້າວຂອງພຣະເຈົ້າຕະຫຼອດຊົ່ວຊີວິດຂອງພວກເຮົາ ແລະ ຖືກເຮັດໃຫ້ສົມບູນໂດຍພຣະອົງ ແລະ ຕອບແທນພຣະຄຸນຂອງພຣະອົງ ແລະ ຕອບແທນຄວາມຮັກຂອງພຣະອົງທີ່ມີໃຫ້ກັບພວກເຮົາ; ແລະ ເຊື່ອຟັງການຈັດແຈງ ແລະ ການປັ້ນແຕ່ງຂອງພຣະອົງ, ຮ່ວມມືກັບພາລະກິດຂອງພຣະອົງ ແລະ ເຮັດທຸກຢ່າງທີ່ພວກເຮົາສາມາດເຮັດໄດ້ເພື່ອເຮັດໃຫ້ສິ່ງທີ່ພຣະອົງມອບໝາຍໃຫ້ກັບພວກເຮົານັ້ນສຳເລັດລົງ.

ການທີ່ຖືກເອົາຊະນະໂດຍພຣະເຈົ້າຄືກັບການແຂ່ງຂັນສິລະປະການຕໍ່ສູ້.

ພຣະທຳແຕ່ລະຂໍ້ໂຈມຕີຈຸດຕາຍຈຸດໃດຈຸດໜຶ່ງຂອງພວກເຮົາ, ເຮັດໃຫ້ພວກເຮົາບາດເຈັບ ແລະ ເຕັມໄປດ້ວຍຄວາມຢ້ານກົວ. ພຣະອົງເປີດເຜີຍຄວາມຄິດຂອງພວກເຮົາ, ຈິນຕະນາການຂອງພວກເຮົາ ແລະ ອຸປະນິໄສທີ່ເສື່ອມຊາມຂອງພວກເຮົາ. ຈາກທຸກສິ່ງທີ່ພວກເຮົາເວົ້າ ແລະ ເຮັດ ຈົນເຖິງຄວາມຄິດ ແລະ ແນວຄິດທຸກຢ່າງຂອງພວກເຮົາ, ທຳມະຊາດ ແລະ ແກ່ນແທ້ຂອງພວກເຮົາຖືກເປີດເຜີຍໃນພຣະທຳຂອງພຣະອົງ, ເຮັດໃຫ້ພວກເຮົາຢູ່ໃນສະພາວະຢ້ານກົວ ແລະ ສັ່ນເຊັນໂດຍບໍ່ມີບ່ອນໃຫ້ເຊື່ອງຄວາມອັບອາຍຂອງພວກເຮົາ. ພຣະອົງບອກເຮົາແຕ່ລະຢ່າງກ່ຽວກັບທຸກການກະທຳຂອງພວກເຮົາ, ຈຸດປະສົງ ແລະ ເຈດຕະນາຂອງພວກເຮົາ, ແມ່ນແຕ່ອຸປະນິໄສທີ່ເສື່ອມຊາມທີ່ພວກເຮົາບໍ່ເຄີຍຄົ້ນພົບດ້ວຍຕົວເອງຈັກເທື່ອ ເຮັດໃຫ້ພວກເຮົາຮູ້ສຶກວ່າພວກເຮົາເປີດເຜີຍຄວາມບໍ່ສົມບູນແບບທີ່ເປັນຕາສົມເພດຂອງຕົນເອງ ແລະ ຍິ່ງໄປກວ່ານັ້ນ ພຣະອົງໄດ້ເອົາຊະນະພວກເຮົາຢ່າງສົມບູນ. ພຣະອົງພິພາກສາພວກເຮົາທີ່ຕໍ່ຕ້ານພຣະອົງ, ຕີສອນພວກເຮົາທີ່ໝິ່ນປະໝາດ ແລະ ກ່າວໂທດພຣະອົງ ແລະ ເຮັດໃຫ້ພວກເຮົາຮູ້ສຶກວ່າ ໃນສາຍຕາຂອງພຣະອົງ ພວກເຮົາບໍ່ມີຈຸດເດັ່ນແຫ່ງການໄຖ່ບາບແມ່ນແຕ່ຢ່າງດຽວ, ຮູ້ສຶກວ່າ ພວກເຮົາແມ່ນຊາຕານທີ່ມີຊີວິດຢູ່. ຄວາມຫວັງຂອງພວກເຮົາຖືກທຳລາຍລົງ; ພວກເຮົາບໍ່ກ້າຮຽກຮ້ອງຈາກພຣະອົງໂດຍບໍ່ມີເຫດຜົນ ຫຼື ມີແນວຄິດວາດຝັນກ່ຽວກັບພຣະອົງອີກ

ຕໍ່ໄປ ແລະ ແມ່ນແຕ່ຄວາມຝັນຂອງພວກເຮົາກໍຫາຍໄປຂ້າມຄືນ. ນີ້ຄືຄວາມຈິງທີ່ບໍ່ມີໃຜໃນພວກເຮົາສາມາດຈິນຕະນາການໄດ້ ແລະ ບໍ່ມີຜູ້ໃດໃນບັນດາພວກເຮົາທີ່ສາມາດຍອມຮັບໄດ້. ພາຍໃນໄລຍະຊ່ວງເວລາດຽວ, ພວກເຮົາສູນເສຍຄວາມສົມດຸນພາຍໃນຕົວພວກເຮົາ ແລະ ບໍ່ຮູ້ຈັກວ່າ ຈະສືບຕໍ່ໃນຫົນທາງທີ່ຢູ່ເບື້ອງໜ້າໄດ້ແນວໃດ ຫຼື ຈະສືບຕໍ່ໃນຄວາມເຊື່ອຂອງພວກເຮົາໄດ້ແນວໃດ. ມັນເບິ່ງຄືກັບວ່າ ຄວາມເຊື່ອຂອງພວກເຮົາໄດ້ກັບຄືນໄປຢູ່ທີ່ຈຸດເລີ່ມຕົ້ນ ແລະ ຄືກັບວ່າພວກເຮົາບໍ່ເຄີຍພົບກັບພຣະເຢຊູເຈົ້າຈັກເທື່ອ ຫຼື ໄດ້ຮູ້ຈັກພຣະອົງເລີຍ. ທຸກສິ່ງທີ່ຢູ່ຕໍ່ຕາຂອງພວກເຮົາຈະເຮັດໃຫ້ພວກເຮົາເຕັມໄປດ້ວຍຄວາມມຶນງົງ ແລະ ເຮັດໃຫ້ພວກເຮົາລັງເລໄປມາໂດຍບໍ່ເດັດຂາດ. ພວກເຮົາຕົກຕະລຶງ, ພວກເຮົາຜິດຫວັງ ແລະ ສ່ວນເລິກໃນຫົວໃຈຂອງພວກເຮົາກໍມີຄວາມໂມໂຫ ແລະ ຄວາມອັບປະຍົດທີ່ອົດກັ້ນບໍ່ໄດ້. ພວກເຮົາພະຍາຍາມລະບາຍ, ຫາທາງອອກ ແລະ ຍິ່ງໄປກວ່ານັ້ນກໍຄື ສືບຕໍ່ລໍຖ້າພຣະຜູ້ຊ່ວຍໃຫ້ພົ້ນພຣະເຢຊູເຈົ້າຂອງພວກເຮົາ, ເພື່ອພວກເຮົາອາດຖອກເທຫົວໃຈຂອງພວກເຮົາຮັບເອົາພຣະອົງ. ເຖິງແມ່ນວ່າ ມີຫຼາຍຄັ້ງທີ່ພວກເຮົາເບິ່ງພາຍນອກຄືກັບວ່າທຸ່ນທ່ຽງ, ບໍ່ອວດດີ ຫຼື ຖ່ອມຕົວ, ແຕ່ໃນຫົວໃຈຂອງພວກເຮົາ, ພວກເຮົາເປັນທຸກໃຈກັບຄວາມຮູ້ສຶກແຫ່ງການສູນເສຍທີ່ພວກເຮົາບໍ່ເຄີຍຮູ້ສຶກມາກ່ອນເລີຍ. ເຖິງວ່າບາງຄັ້ງ ພວກເຮົາອາດໃຈເຢັນແບບຜິດປົກກະຕິຢູ່ພາຍນອກ, ຈິດໃຈຂອງພວກເຮົາກໍຟົດຍ້ອນຄວາມທໍລະມານຄືກັບທະເລທີ່ມີພາຍຸຮ້າຍແຮງ. ການພິພາກສາ ແລະ ການຕີສອນຂອງພຣະອົງໄດ້ລົບລ້າງຄວາມຫວັງ ແລະ ຄວາມຝັນທັງໝົດຂອງພວກເຮົາ, ນຳຈຸດສິ້ນສຸດມາສູ່ຄວາມປາຖະໜາທີ່ສິ້ນເປືອງຂອງພວກເຮົາ ແລະ ເຮັດໃຫ້ພວກເຮົາບໍ່ເຕັມໃຈທີ່ຈະເຊື່ອວ່າພຣະອົງເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງພວກເຮົາ ແລະ ສາມາດຊ່ວຍພວກເຮົາໃຫ້ລອດພົ້ນໄດ້. ການພິພາກສາ ແລະ ການຕີສອນຂອງພຣະອົງໄດ້ເປີດອ່າວທະເລເລິກລະຫວ່າງພວກເຮົາ ແລະ ພຣະອົງ ເຊິ່ງເປັນອ່າວທະເລເລິກທີ່ບໍ່ມີຜູ້ໃດເຕັມໃຈທີ່ຈະຂ້າມໄປ. ການພິພາກສາ ແລະ ການຕີສອນຂອງພຣະອົງແມ່ນຄັ້ງທຳອິດທີ່ພວກເຮົາໄດ້ທົນທຸກກັບຄວາມຍາກລຳບາກຢ່າງໃຫຍ່ຫຼວງ ເຊິ່ງເປັນຄວາມອັບອາຍຂາຍໜ້າທີ່ຍິ່ງໃຫຍ່ໃນຊີວິດຂອງພວກເຮົາ. ການພິພາກສາ ແລະ ການຕີສອນຂອງພຣະອົງໄດ້ເຮັດໃຫ້ພວກເຮົາຍົກຍ້ອງກຽດຂອງພຣະອົງ ແລະ ຄວາມບໍ່ທົນຕໍ່ການກະທຳຜິດຂອງມະນຸດຢ່າງແທ້ຈິງ, ດ້ວຍວ່າເມື່ອປຽບທຽບກັບຄວາມຕໍ່າຊ້າ ແລະ ຄວາມບໍ່ບໍລິສຸດຂອງພວກເຮົາແລ້ວແມ່ນຍິ່ງໃຫຍ່ເຫຼືອເກີນ. ການພິພາກສາ ແລະ ການຕີສອນຂອງພຣະອົງໄດ້ເຮັດໃຫ້ພວກເຮົາຮັບຮູ້ເປັນຄັ້ງທຳອິດວ່າ ພວກເຮົາອວດດີ ແລະ ໂອ້ອວດຫຼາຍພຽງໃດ, ແລະ ຮູ້ວ່າມະນຸດຈະບໍ່ມີທາງເທົ່າທຽມກັບພຣະເຈົ້າ ຫຼື ເທົ່າກັບພຣະເຈົ້າໄດ້ແນວໃດ. ການພິພາກສາ ແລະ ການຕີສອນຂອງພຣະອົງໄດ້ເຮັດໃຫ້ພວກເຮົາປາຖະໜາທີ່ຈະບໍ່ມີຊີວິດຢູ່ໃນອຸປະນິໄສທີ່ເສື່ອມຊາມດັ່ງກ່າວ, ເພື່ອກຳຈັດທຳມະຊາດ ແລະ ແກ່ນແທ້ນີ້ຈາກພວກເຮົາເອງໃຫ້ໄວເທົ່າທີ່ຈະໄວໄດ້ ແລະ ເພື່ອຢຸດຄວາມຊົ່ວຊ້າ ແລະ ສິ່ງທີ່ເປັນຕາຊັງຕໍ່ພຣະອົງ. ການພິພາກສາ ແລະ ການຕີສອນຂອງພຣະອົງໄດ້ເຮັດໃຫ້ພວກເຮົາຍິນດີທີ່ຈະເຊື່ອຟັງພຣະທຳຂອງພຣະອົງ, ບໍ່ກະບົດຕໍ່ການຈັດແຈງ ແລະ ການປັ້ນແຕ່ງຂອງພຣະອົງອີກຕໍ່ໄປ. ການພິພາກສາ ແລະ ການຕີສອນຂອງພຣະອົງມອບຄວາມປາຖະໜາເພື່ອການຢູ່ລອດໃຫ້ກັບພວກເຮົາອີກຄັ້ງ ແລະ ເຮັດໃຫ້ພວກເຮົາ

ຍິນດີທີ່ຈະຍອມຮັບພຣະອົງເປັນພຣະຜູ້ຊ່ວຍໃຫ້ພົ້ນ... ພວກເຮົາໄດ້ອອກຈາກພາລະກິດແຫ່ງການເອົາຊະນະ, ອອກຈາກນະຮົກ, ອອກຈາກເຫວແຫ່ງຄວາມມືດຂອງຄວາມຕາຍ... ພຣະເຈົ້າອົງຊົງລິດທານຸພາບສູງສຸດໄດ້ຮັບເອົາພວກເຮົາ, ເຊິ່ງເປັນຄົນກຸ່ມນີ້! ພຣະອົງມີໄຊຊະນະເໜືອຊາຕານ ແລະ ໄດ້ເອົາຊະນະສັດຕູຈຳນວນຫຼວງຫຼາຍຂອງພຣະອົງແລ້ວ!

ພວກເຮົາເປັນພຽງກຸ່ມຄົນທຳມະດາ, ມີອຸປະນິໄສທີ່ເສື່ອຊາມຂອງຊາຕານ, ເປັນຄົນທີ່ພຣະເຈົ້າໄດ້ກຳນົດຊະຕາກຳໄວ້ລ່ວງໜ້າກ່ອນຍຸກຕ່າງໆ ແລະ ເປັນຄົນຂັດສົນທີ່ພຣະເຈົ້າໄດ້ຍົກຂຶ້ນຈາກກອງຂີ້ສັດ. ພວກເຮົາເຄີຍຖືກພຣະເຈົ້າປະຕິເສດ ແລະ ກ່າວໂທດ, ແຕ່ຕອນນີ້ ພວກເຮົາຖືກພຣະອົງເອົາຊະນະແລ້ວ. ຈາກພຣະເຈົ້າ ພວກເຮົາໄດ້ຮັບຊີວິດ ແລະ ຫົນທາງແຫ່ງຊີວິດຕະຫຼອດໄປເປັນນິດ. ບໍ່ວ່າພວກເຮົາຈະຢູ່ໃສໃນເທິງແຜ່ນດິນໂລກ, ບໍ່ວ່າພວກເຮົາຈະອົດກັ້ນຕໍ່ການຂົ່ມເຫັງ ແລະ ຄວາມລຳບາກຍາກແຄ້ນຫຍັງກໍຕາມ, ພວກເຮົາບໍ່ສາມາດອອກຫ່າງຈາກຄວາມລອດພົ້ນຂອງພຣະເຈົ້າອົງຊົງລິດທານຸພາບສູງສຸດໄດ້. ຍ້ອນພຣະອົງເປັນພຣະຜູ້ສ້າງຂອງພວກເຮົາ ແລະ ເປັນເສັ້ນທາງໄຖ່ບາບແຫ່ງດຽວຂອງພວກເຮົາ!

ຄວາມຮັກຂອງພຣະເຈົ້າຂະຫຍາຍໄປຂ້າງໜ້າຄືກັບນໍ້າທີ່ຢູ່ໃນນໍ້າພຸ ແລະ ມັນຖືກມອບໃຫ້ກັບເຈົ້າ, ໃຫ້ກັບເຮົາ, ແລະ ໃຫ້ກັບຄົນອື່ນ, ໃຫ້ກັບທຸກຄົນທີ່ສະແຫວງຫາຄວາມຈິງ ແລະ ລໍຖ້າການປາກົດຂອງພຣະເຈົ້າຢ່າງແທ້ຈິງ.

ຄືກັບດວງຕາເວັນ ແລະ ດວງເດືອນທີ່ປ່ຽນກັນຂຶ້ນ, ພາລະກິດຂອງພຣະເຈົ້າກໍບໍ່ຢຸດເຊົາເຊັ່ນດຽວກັນ ແລະ ຈະປະຕິບັດໃນຕົວເຈົ້າ, ໃນຕົວເຮົາ, ໃນຄົນອື່ນ ແລະ ໃນທຸກຄົນທີ່ຕິດຕາມຮອຍບາດກ້າວຂອງພຣະເຈົ້າ ແລະ ຍອມຮັບການພິພາກສາ ແລະ ການຕີສອນຂອງພຣະອົງ.

ວັນທີ 23 ມີນາ 2010

# ບົດສົ່ງທ້າຍ

ເຖິງແມ່ນວ່າພຣະທຳເຫຼົ່ານີ້ບໍ່ໄດ້ປະກອບດ້ວຍການສະແດງອອກຂອງພຣະເຈົ້າທັງໝົດ, ແຕ່ມັນກໍພຽງພໍສຳລັບຜູ້ຄົນທີ່ຈະບັນລຸເປົ້າຫມາຍຂອງການຮູ້ຈັກພຣະເຈົ້າ ແລະ ປະສົບກັບການປ່ຽນແປງໃນອຸປະນິໄສຂອງພວກເຂົາ. ບາງເທື່ອມີບາງຄົນຄິດວ່າ ເພາະວ່າພາລະກິດຂອງພຣະເຈົ້າຢູ່ໃນປະເທດຈີນແຜ່ນດິນໃຫຍ່ໄດ້ສິ້ນສຸດລົງແລ້ວ, ນີ້ພິສູດໃຫ້ເຫັນວ່າພຣະອົງໄດ້ສຳເລັດການກ່າວພຣະທຳທັງໝົດທີ່ພຣະອົງຄວນກ່າວ ແລະ ເປັນໄປບໍ່ໄດ້ທີ່ພຣະອົງຈະມີສິ່ງໃຫມ່ກ່າວ ເພາະວ່າພຣະເຈົ້າເທົ່ານັ້ນທີ່ສາມາດກ່າວພຣະທຳເຫຼົ່ານັ້ນໄດ້. ຍິ່ງໄປກວ່ານັ້ນ, ຍັງມີຜູ້ຄົນທີ່ເຊື່ອວ່າໜັງສື ພຣະທຳປາກົດໃນຮ່າງກາຍປະກອບດ້ວຍການສະແດງອອກທັງໝົດຂອງພຣະເຈົ້າໃນຍຸກແຫ່ງອານາຈັກ ແລະ ການໄດ້ຮັບໜັງສືເຫຼັ້ມນີ້ແມ່ນເທົ່າກັບການໄດ້ຮັບທຸກຢ່າງຂອງພຣະເຈົ້າ ຫຼື ໜັງສືເຫຼັ້ມນີ້ຈະນຳພາມະນຸດຊາດໃນອະນາຄົດຄືກັບພຣະຄຳພີໄດ້ນຳພາພວກເຂົາ. ເຮົາເຊື່ອວ່າຜູ້ຄົນທີ່ມີທັດສະນະດັ່ງກ່າວຄືກຸ່ມຄົນສ່ວນໃຫຍ່, ເພາະວ່າຜູ້ຄົນມັກຈະຈຳກັດພຣະເຈົ້າ. ເຖິງແມ່ນວ່າພວກເຂົາທັງໝົດຈະປະກາດວ່າ ພຣະເຈົ້າມີລິດອຳນາດທີ່ຍິ່ງໃຫຍ່ ແລະ ຄວບຄຸມສັບພະສິ່ງທັງປວງ, ທຳມະຊາດຂອງມະນຸດກໍຍັງເຮັດໃຫ້ພວກເຂົາຈຳກັດພຣະເຈົ້າຢູ່ໃນຂອບເຂດໃດໜຶ່ງ. ທຸກຄົນກຳລັງຮູ້ຈັກພຣະເຈົ້າ ແຕ່ໃນຂະນະທີ່ທຸກຄົນກໍກຳລັງປະຕິເສດ ແລະ ຈຳກັດພຣະອົງເຊັ່ນກັນ.

ພາລະກິດຂອງພຣະເຈົ້າໃນຍຸກແຫ່ງອານາຈັກແມ່ນພຽງແຕ່ໄດ້ເລີ່ມຕົ້ນເທົ່ານັ້ນ. ພຣະຄຳທັງໝົດຂອງພຣະເຈົ້າໃນໜັງສືເຫຼັ້ມນີ້ແມ່ນເພື່ອແນໃສ່ຜູ້ທີ່ຕິດຕາມພຣະອົງໃນເວລານັ້ນ ແລະ ມັນເປັນພຽງສ່ວນໜຶ່ງຂອງການສະແດງອອກຂອງພຣະເຈົ້າໃນການບັງເກີດເປັນມະນຸດຂອງພຣະອົງໃນປັດຈຸບັນ; ມັນບໍ່ໄດ້ເປັນຕົວແທນພຣະເຈົ້າທັງໝົດ. ຍິ່ງໄປກວ່ານັ້ນ, ບໍ່ສາມາດເວົ້າໄດ້ວ່າມັນກວມເອົາພາລະກິດທັງໝົດທີ່ພຣະເຈົ້າຈະກະທຳໃນຂະນະທີ່ຢູ່ໃນການບັງເກີດເປັນມະນຸດນີ້. ພຣະເຈົ້າຈະແນພຣະທຳຂອງພຣະອົງໃສ່ຜູ້ຄົນຈາກຫຼາກຫຼາຍຊົນເຜົ່າ ແລະ ຊົນຊັ້ນ ແລະ ພຣະອົງຈະເອົາຊະນະມະນຸດຊາດທັງໝົດ ແລະ ສິ້ນສຸດຍຸກເກົ່າ, ດັ່ງນັ້ນ ພຣະອົງຈະເຮັດສຳເລັດໄດ້ແນວໃດ ໃນເມື່ອພຣະອົງພຽງແຕ່ສະແດງພຣະທຳເລັກນ້ອຍບາງສ່ວນຂອງພຣະອົງເທົ່ານັ້ນ? ມັນເປັນເພາະວ່າພາລະກິດຂອງພຣະເຈົ້າໄດ້ຖືກແບ່ງອອກເປັນໄລຍະ ແລະ ຂັ້ນຕອນທີ່ແຕກຕ່າງກັນ: ພຣະອົງກຳລັງປະຕິບັດພາລະກິດຕາມແຜນຂອງພຣະອົງ ແລະ ສະແດງພຣະທຳຂອງພຣະອົງຕາມຂັ້ນຕອນຂອງພຣະອົງ. ມະນຸດຈະສາມາດຢັ່ງເຖິງຄວາມພະຍາຍາມ ແລະ ສະຕິປັນຍາຂອງພຣະເຈົ້າໄດ້ແນວໃດ? ຄວາມຈິງທີ່ເຮົາຕ້ອງການອະທິບາຍໃນນີ້ກໍຄື: ສິ່ງທີ່ພຣະເຈົ້າເປັນ ແລະ ມີ ແມ່ນໄຮ້ຈຸດສິ້ນສຸດ ແລະ ບໍ່ມີຂອບເຂດ. ພຣະເຈົ້າເປັນແຫຼ່ງກຳເນີດຂອງຊີວິດ ແລະ ສັບພະສິ່ງທັງປວງ; ພຣະເຈົ້າບໍ່ສາມາດຢັ່ງເຖິງໄດ້ໂດຍສິ່ງທີ່ຖືກສ້າງ. ສະຫຼຸບກໍຄື ເຮົາຕ້ອງສືບຕໍ່ເຕືອນທຸກຄົນວ່າ: ຢ່າຈຳກັດພຣະເຈົ້າພຽງໃນໜັງສື, ພຣະທຳ ຫຼື ພຣະຄຳທີ່ຜ່ານມາຂອງພຣະອົງອີກ. ມີພຽງຄຳສັບດຽວທີ່ອະທິບາຍລັກສະນະພາລະກິດຂອງພຣະເຈົ້າ ນັ້ນກໍຄື ໃໝ່. ພຣະອົງບໍ່ມັກໃຊ້ເສັ້ນທາງເກົ່າ ຫຼື ກະທຳພາລະກິດຂອງພຣະອົງຊໍ້າແລ້ວຊໍ້າອີກ; ຍິ່ງໄປກວ່ານັ້ນ

ພຣະອົງບໍ່ຕ້ອງການໃຫ້ຜູ້ຄົນນະມັດສະການພຣະອົງໂດຍການຈຳກັດພຣະອົງຢູ່ໃນຂອບເຂດໃດໜຶ່ງ. ນີ້ແມ່ນອຸປະນິໄສຂອງພຣະເຈົ້າ.

ເວັບໄຊ ພຣະກິດຕິຄຸນ
ລະຫັດ QR

ແອັບຄຣິສຕະຈັກຂອງ
ພຣະເຈົ້າອົງຊົງລິດທານຸພາບສູງສຸດ

ເວັບໄຊ ພຣະກິດຕິຄຸນ
https://lo.kingdomsalvation.org

---

**YouTube:** https://l.kingdomsalvation.org/lo/video

**E-mail:** contact.lo@kingdomsalvation.org

---